# Laotian: Unlocked Literal Bible for 1 ກະສັດ, 1 ຂ່າວຄາວ, 1 ຊາມູເອນ, 1 ຕີໂມທຽວ, 1 ເທສະໂລນິກ, 1 ໂກຣິນໂທ, 1 ໂຢຮັນ, 1 ເປໂຕ, 2 ກະສັດ, 2 ຂ່າວຄາວ, 2 ຊາມູເອນ, 2 ຕີໂມທຽວ, 2 ເທສະໂລນິກ, 2 ເປໂຕ, 2 ໂກຣິນໂທ, 2 ໂຢຮັນ, 3 ໂຢຮັນ, ກິດຈະການ, ກິດລະບຽບເລວີ, ຄາລາເຕຍ, ຈິດບັນຊີ, ຍອດເພງ, ດານີເອນ, ຕີໂຕ, ນາງຣຸດ, ນາຮູມ, ປັນຍາຈານ, ພຣະຄັມ ໂຢບ, ພຣະຄຳພີ ຮັກກາຍ, ພຣະນິມິດ, ພຣະບັນຍັດສອງ, ພວກຜູ້ປິກຄອງ, ຟີລິບປອຍ, ຟີເລໂມນ, ມັດທາຍ, ມາຣະໂກ, ມາລະກີ, ມີກາ, ຢາໂກໂບ, ຢູດາ, ລູກາ, ສຸພາສິດ, ອາໂມດ, ອົບພະຍົບ, ຮາບາກຸກ, ເຊຄາຣີຢາ, ເຊຟານີຢາ, ເນເຫມີຢາ, ເພງຄ່ຳຄວນ, ເພງສັນຣະເສີນ, ເຢເຣມີຢາ, ເອຊະຣາ, ເອສະເທີ, ເອເຊກຽນ, ເອເຟໂຊ, ເອຊາຢາ, ເຮັບເຣີ, ໂກໂລຊາຍ, ໂຢຊວຍ, ໂຢນາ, ໂຢຮັນ, ໂຢເອນ, ໂຣມ, ໂອບາດີຢາ, ໂຮເສຢາ, ປະຖົມມະການ

Formatted for Translators



generated on Tue Jun 17 19:01:42 2025

©2022 Wycliffe Associates
Released under a Creative Commons Attribution-ShareAlike 4.0 International License.

Bible Text: The English Unlocked Literal Bible (ULB)
©2017 Wycliffe Associates
Available at https://bibleineverylanguage.org/translations
The English Unlocked Literal Bible is based on the unfoldingWord® Literal Text, CC BY-SA 4.0. The original work of the unfoldingWord® Literal Text is available at https://unfoldingword.bible/ult/.
The ULB is licensed under the Creative Commons Attribution-ShareAlike 4.0 International License.

Notes: English ULB Translation Notes
©2017 Wycliffe Associates
Available at https://bibleineverylanguage.org/translations
The English ULB Translation Notes is based on the unfoldingWord translationNotes, under CC BY-SA 4.0. The original unfoldingWord work is available at https://unfoldingword.bible/utn.
The ULB Notes is licensed under the Creative Commons Attribution-ShareAlike 4.0 International License.

To view a copy of the CC BY-SA 4.0 license visit http://creativecommons.org/licenses/by-sa/4.0/

Below is a human-readable summary of (and not a substitute for) the license.
You are free to:

- Share — copy and redistribute the material in any medium or format.
- Adapt — remix, transform, and build upon the material for any purpose, even commercially.

The licensor cannot revoke these freedoms as long as you follow the license terms.
Under the following conditions:

- Attribution — You must attribute the work as follows: "Original work available at https://BibleInEveryLanguage.org." Attribution statements in derivative works should not in any way suggest that we endorse you or your use of this work.
- ShareAlike — If you remix, transform, or build upon the material, you must distribute your contributions under the same license as the original.
- No additional restrictions — You may not apply legal terms or technological measures that legally restrict others from doing anything the license permits.

Notices:
You do not have to comply with the license for elements of the material in the public domain or where your use is permitted by an applicable exception or limitation.
No warranties are given. The license may not give you all of the permissions necessary for your intended use. For example, other rights such as publicity, privacy, or moral rights may limit how you use the material.

 generated on Tue Jun 17 19:01:42 2025

# ປະຖົມມະການ

1 1ໃນປະຖົມມະການ, ພຣະເຈົ້າຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ.2ແຜ່ນດິນນັ້ນບໍ່ມີຮູບຮ່າງ ແລະ ຫວ່າງເປົ່າຢູ່.
ຄວາມມືດປົກຄຸມຢູ່ເຫນືອຜິວຫນ້າຂອງບ່ອນເລິກ. ພຣະວິນຍານຂອງພຣະເຈົ້າເຄື່ອນໄຫວຢູ່ເຫນືອຜິວນ້ຳນັ້ນ.

3ພຣະເຈົ້າກ່າວວ່າ, "ຈົ່ງເກີດຄວາມສະຫວ່າງ," ແລະ ຄວາມສະຫວ່າງກໍເກີດຂຶ້ນ.4ພຣະເຈົ້າຊົງເຫັນ, ຄວາມສະຫວ່າງນັ້ນດີ.
ພຣະອົງຊົງແຍກຄວາມສະຫວ່າງອອກຈາກຄວາມມືດ.5ພຣະເຈົ້າຊົງເອີ້ນຄວາມສະຫວ່າງ "ວັນ," ແລະ ຄວາມມືດນັ້ນພຣະອົງຊົງຮຽກວ່າ
"ຄືນ." ນີ້ແມ່ນເວລາແລງ ແລະ ເວລາເຊົ້າ, ເປັນວັນທີຫນຶ່ງ.
6ພຣະເຈົ້າກ່າວວ່າ, "ຈົ່ງເກີດແຜ່ນຟ້າ, ໃນລະຫວ່າງນ້ຳ, ແລະ ໃຫ້ແຜ່ນດິນແຍກນ້ຳອອກຈາກກັນ."7ພຣະເຈົ້າຈຶ່ງຊົງສ້າງແຜ່ນຟ້າ ແລະ
ໄດ້ແຍກນ້ຳອອກຈາກກັນຄື ນ້ຳທີ່ຢູ່ລຸ່ມແຜ່ນຟ້າ ແຍກນ້ຳອອກຈາກນ້ຳທີ່ຢູ່ເທິງແຜ່ນຟ້າ. ແລ້ວກໍເປັນດັ່ງນັ້ນ.8ພຣະເຈົ້າຊົງຮຽກແຜ່ນຟ້ານັ້ນວ່າ
"ທ້ອງຟ້າ." ມີເວລາຄ່ຳ, ແລະ ເວລາເຊົ້າ, ນັ້ນເປັນມື້ທີສອງ.
9ພຣະເຈົ້າຊົງກ່າວວ່າ, "ໃຫ້ນ້ຳທີ່ຢູ່ໃຕ້ຟ້າລວມຢູ່ໃນທີ່ດຽວກັນ, ແລະ ໃຫ້ພື້ນດິນແຫ້ງປາກົດຂຶ້ນ." ກໍເປັນຢ່າງນັ້ນ.
10ພຣະເຈົ້າຊົງເອີ້ນພື້ນດິນແຫ້ງວ່າ, "ແຜ່ນດິນ," ແລະ ນ້ຳທີ່ລວມກັນນັ້ນພຣະອົງຊົງເອີ້ນວ່າ "ທະເລ." ພຣະອົງຊົງເຫັນວ່າດີ.
11ພຣະເຈົ້າກ່າວວ່າ, "ໃຫ້ແຜ່ນດິນເກີດພືດທຸກຊະນິດ: ທັງແນວເປັນເມັດ ແລະ ແນວເປັນຫມາກຕາມຊະນິດຂອງມັນ." ກໍເປັນຢ່າງນັ້ນ.
12ແຜ່ນດິນໂລກກໍໃຫ້ເກີດ ພືດຕ່າງໆທີ່ໃຫ້ເມັດຕາມຊະນິດຂອງມັນ, ແລະ ຕົ້ນໄມ້ທັງຫລາຍທີ່ມີຜົນ, ທີ່ມີເມັດຢູ່ໃນຫມາກຕາມຊະນິດຂອງມັນ.
ພຣະເຈົ້າຊົງເຫັນວ່າດີ.13ມີເວລາຄ່ຳ ແລະ ມີເວລາເຊົ້າ, ເປັນມື້ທີສາມ.
14ພຣະເຈົ້າກ່າວວ່າ, "ຈົ່ງມີດວງຈັນໃນທ້ອງຟ້າ ເພື່ອແຍກກາງເວັນອອກຈາກກາງຄືນ ແລະ ໃຫ້ພວກມັນເປັນສັນຍາລັກ, ສຳລັບລະດູຕ່າງໆ,
ສຳລັບວັນຕ່າງໆ ແລະປີທັງຫລາຍ.15ໃຫ້ມັນທັງຫລາຍກາຍເປັນດວງສະຫວ່າງໃນທ້ອງຟ້າເພື່ອທີ່ຈະໃຫ້ແສງສະຫວ່າງເຫນືອແຜ່ນດິນ."
ກໍເປັນຢ່າງນັ້ນ.
16ພຣະເຈົ້າຊົງສ້າງດວງແຈ້ງໃຫຍ່ສອງດວງຄື, ດວງຕາເວັນໃຫ້ຄອບຄອງກາງເວັນ, ແລະດວງຈັນໃຫ້ຄອບຄອງກາງຄືນ.
ພຣະອົງຊົງສ້າງດວງດາວຕ່າງໆດ້ວຍ,17ພຣະເຈົ້າຊົງຕັ້ງມັນທັງຫລາຍໄວ້ໃນທ້ອງຟ້າເພື່ອສ່ອງສະຫວ່າງເຫນືອແຜ່ນດິນ,
18ເພື່ອທີ່ຈະຄອບຄອງກາງເວັນແລະ ກາງຄືນ, ແລະ ເພື່ອທີ່ຈະແຍກຄວາມສະຫວ່າງອອກຈາກຄວາມມືດ. ພຣະເຈົ້າຊົງເຫັນວ່າດີ.19ມີເວລາຄ່ຳ
ແລະ ເວລາເຊົ້າ, ເປັນວັນທີສີ່.
20ພຣະເຈົ້າກ່າວວ່າ, "ໃນນ້ຳຈົ່ງເຕັມໄປດ້ວຍສິ່ງມີຊີວິດຈຳນວນຫລາຍ, ແລະ
ໃຫ້ນົກທັງຫລາຍບິນເຫນືອແຜ່ນດິນໂລກໃນພາກພື້ນແຫ່ງທ້ອງຟ້າ."21ພຣະເຈົ້າຊົງສ້າງສັດທະເລຂະຫນາດໃຫຍ່,
ຕາມຊະນິດຂອງພວກມັນເຊັ່ນດຽວກັນກັບສິ່ງມີຊີວິດທັງຫລາຍ, ສິ່ງມີຊີວິດທີ່ເຄື່ອນໄຫວ ແລະ ຢູ່ໃນນ້ຳທຸກແຫ່ງ, ແລະ
ນົກທີ່ບິນທັງຫລາຍຕາມຊະນິດຂອງພວກມັນ. ພຣະເຈົ້າຊົງເຫັນວ່າດີ.
22ພຣະເຈົ້າຊົງອວຍພອນພວກມັນ, ທັງຫລາຍກ່າວວ່າ, "ຈົ່ງແຜ່ພັນ, ແລະ ທະວີຄູນຫລາຍຂຶ້ນ, ແລະ ໃຫ້ມີເຕັມໃນນ້ຳໃນທະເລ.
ໃຫ້ນົກທັງຫລາຍທະວີຫລາຍຂຶ້ນເທິງແຜ່ນດິນ."23ມີເວລາຄ່ຳ ແລະ ມີເວລາເຊົ້າ, ເປັນມື້ທີຫ້າ.
24ພຣະເຈົ້າກ່າວວ່າ, "ໃຫ້ແຜ່ນດິນເກີດສັດທີ່ມີຊີວິດ, ແຕ່ລະຢ່າງຕາມຊະນິດຂອງພວກມັນ, ຄືສັດລ້ຽງ, ສັດເລືອຄານ, ແລະ
ສັດປ່າຂອງແຜ່ນດິນໂລກ, ແຕ່ລະຢ່າງຕາມຊະນິດຂອງມັນ." ກໍເປັນຢ່າງນັ້ນ.25ພຣະເຈົ້າໄດ້ຊົງສ້າງສັດປ່າຕາມຊະນິດຂອງມັນ,
ສັດລ້ຽງຕາມຊະນິດຂອງມັນ, ແລະ ທຸກສິ່ງທີ່ເລືອຄານເທິງພື້ນດິນຕາມຊະນິດຂອງພວກມັນ. ພຣະອົງຊົງເຫັນວ່າດີ.
26ພຣະເຈົ້າກ່າວວ່າ, "ໃຫ້ເຮົາສ້າງມະນຸດຕາມແບບຢ່າງຂອງເຮົາ, ຕາມລັກສະນະຂອງເຮົາ. ໃຫ້ພວກເຂົາຄອບຄອງຝູງປາຂອງທະເລ,
ຝູງນົກຂອງທ້ອງຟ້າ, ຝູງສັດລ້ຽງເຫນືອແຜ່ນດິນທັງຫມົດ, ແລະ
ຄອບຄອງສັດເລືອຄານທຸກຊະນິດທີ່ເຄື່ອນໄຫວເທິງແຜ່ນດິນໂລກ."27ພຣະເຈົ້າຊົງສ້າງມະນຸດຕາມແບບຢ່າງຂອງພຣະອົງ.
ຕາມແບບຢ່າງຂອງພຣະເຈົ້າ. ພຣະອົງຊົງສ້າງພວກເຂົາເປັນຊາຍ ແລະຍິງ.
28ພຣະເຈົ້າຊົງອວຍພອນພວກເຂົາ, ແລະກ່າວກັບພວກເຂົາວ່າ, "ຈົ່ງແຜ່ພັນ, ແລະຂະຫຍາຍຫລາຍຂຶ້ນຈົນເຕັມແຜ່ນດິນ,
ຈົ່ງຄອບຄອງຝູງປາໃນທະເລ, ຄອບຄອງຝູງນົກໃນທ້ອງຟ້າ, ແລະ ສິ່ງທີ່ມີຊີວິດທຸກຢ່າງທີ່ເຄື່ອນໄຫວເທິງແຜ່ນດິນ."29ພຣະເຈົ້າກ່າວວ່າ,
"ເບິ່ງແມ, ເຮົາໄດ້ໃຫ້ພືດທຸກຊະນິດທີ່ມີເມັດຢູ່ເທິງພື້ນຂອງແຜ່ນດິນທັງຫມົດ, ແລະ
ຕົ້ນໄມ້ທຸກຕົ້ນທີ່ໃຫ້ຫມາກຊຶ່ງມີເມັດຢູ່ຂ້າງໃນໃຫ້ເປັນອາຫານຂອງພວກເຈົ້າ.
30ພວກສັດທຸກຕົວຂອງແຜ່ນດິນ, ນົກທຸກຕົວຂອງທ້ອງຟ້າ, ແລະ ສິ່ງທີ່ມີຊີວິດທຸກຊະນິດທີ່ເລືອຄານເທິງແຜ່ນດິນ, ແລະ
ທຸກສິ່ງຊຶ່ງຊົງສ້າງທີ່ມີລົມຫາຍໃຈ ເຮົາໃຫ້ພືດສີຂຽວທຸກຢ່າງເປັນອາຫານ." ກໍເປັນຢ່າງນັ້ນ.31ພຣະເຈົ້າຊົງເຫັນທຸກສິ່ງທີ່ພຣະອົງຊົງສ້າງ.
ເບິ່ງແມ, ມັນດີຫລາຍ. ມີເວລາຄ່ຳ ແລະ ເວລາເຊົ້າເປັນມື້ທີຫົກ.


generated on Tue Jun 17 19:01:42 2025

2 [1]ເມື່ອຟ້າ ແລະ ແຜ່ນດິນໂລກ ກັບສັບພະທຸກສິ່ງທັງຫມົດທີ່ມີຢູ່ໃນນັ້ນກໍສຳເລັດເສັດສິ້ນ.[2]ມື້ທີເຈັດສິ່ງທີ່ພຣະເຈົ້າໄດ້ສ້າງກໍສຳເລັດ,
ແລະພຣະອົງໄດ້ຢຸດພັກຜ່ອນໃນມື້ທີເຈັດນີ້ຈາກກິຈະການທັງຫມົດຂອງພຣະອົງ.[3]ພຣະເຈົ້າອວຍພອນມື້ທີເຈັດ ແລະ
ຕັ້ງໄວ້ໃຫ້ເປັນວັນສັກສິດບໍຣິສຸດ, ເພາະໃນມື້ນັ້ນ ພຣະອົງໄດ້ຢຸດພັກຈາກການນິຣະມິດສ້າງ ແລະ ຢຸດກິຈະການທັງສິ້ນ.

[4]ເຫລົ່ານີ້ຄືເຫດການກຽ່ວກັບຟ້າ ແລະແຜ່ນດິນ, ເມື່ອຖືກສ້າງຂຶ້ນ, ໃນວັນທີ່ພຣະຢາເວ ພຣະເຈົ້າຊົງສ້າງແຜ່ນດິນ ແລະ ຟ້າ.
[5]ຍັງບໍ່ມີພຸ່ມໄມ້ຂອງທ້ອງທົ່ງເກີດຂຶ້ນເທິງແຜ່ນດິນເລີຍ, ແລະ ບໍ່ມີຕົ້ນໄມ້ຂອງທົ່ງນາເກີດຂຶ້ນ, ເພາະວ່າພຣະຢາເວ
ພຣະເຈົ້າບໍ່ໄດ້ເຮັດໃຫ້ຝົນຕົກລົງມາເທິງແຜ່ນດິນ ແລະ ບໍ່ມີຄົນໄຖພວນດິນ.[6]ມີແຕ່ຫມອກຂຶ້ນມາຈາກແຜ່ນດິນ ແລະ
ໃຫ້ຄວາມຊຸ່ມຊື່ນແກ່ຫນ້າດິນທັງຫມົດ.
[7]ພຣະຢາເວພຣະເຈົ້າຊົງສ້າງມະນຸດຈາກຂີ້ດິນ, ແລະ ເປົ່າລົມຫາຍໃຈແຫ່ງຊີວິດເຂົ້າທາງຮູດັງຂອງເຂົາ, ແລະ ມະນຸດຈຶ່ງກາຍເປັນຜູ້ມີຊີວິດ.
[8]ພຣະຢາເວພຣະເຈົ້າຊົງສ້າງສວນຂຶ້ນສວນຫນຶ່ງທາງທິດຕາເວັນອອກ, ໃນເອເດນ, ແລະພຣະອົງຊົງໃຫ້ມະນຸດທີ່ພຣະອົງຊົງສ້າງຢູ່ທີ່ນັ້ນ.
[9]ຈາກພື້ນດິນພຣະຢາເວ ພຣະເຈົ້າຊົງເຮັດໃຫ້ຕົ້ນໄມ້ທຸກຕົ້ນເກີດຈາກພື້ນດິນເຕີບໂຕສວຍງາມຫນ້າເບິ່ງ ແລະ ດີທີ່ຈະເປັນອາຫານ.
ນີ້ລວມເຖິງຕົ້ນໄມ້ແຫ່ງຊີວິດ, ແລະ ຕົ້ນໄມ້ແຫ່ງຄວາມຮູ້ດີແລະ ຊົ່ວຊຶ່ງຢູ່ກາງສວນນັ້ນ.[10]ມີແມ່ນ້ຳສາຍຫນຶ່ງໄຫລມາຈາກເອເດນ.
ໄປຫົດສວນນັ້ນ, ຈາກທີ່ນັ້ນກໍແຍກອອກກາຍເປັນແມ່ນ້ຳສີ່ສາຍ.
[11]ແມ່ນ້ຳສາຍທີ່ຫນຶ່ງຊື່ປີໂຊນ. ມັນເປັນແມ່ນ້ຳທີ່ໄຫລຜ່ານແຜ່ນດິນທັງຫມົດຂອງຮາວີລາ, ທີ່ນັ້ນມີທອງຄຳ.
[12]ທອງຄຳຂອງແຜ່ນດິນນັ້ນເປັນທອງຄຳທີ່ດີ. ມີຢາງໄມ້ຕະຄ້າ(ຢາງໄມ້ຫອມທີ່ມີຣາຄາ) ແລະ ໂມຣາດ້ວຍ.
[13]ແມ່ນ້ຳສາຍທີ່ສອງຊື່ກີໂຮນ. ແມ່ນ້ຳສາຍນີ້ໄຫລຜ່ານແຜ່ນດິນທັງຫມົດຂອງກູເຊ.[14]ແມ່ນ້ຳສາຍທີ່ສາມຊື່ວ່າຕິກຣິດ,
ຊຶ່ງໄຫລໄປທາງຕາເວັນອອກຂອງອັດຊີເລຍ, ແມ່ນ້ຳສາຍທີ່ສີ່ຄືເອີຟຣັດ.
[15]ພຣະຢາເວ ພຣະເຈົ້າໄດ້ໃຫ້ມະນຸດຢູ່ໃນສວນແຫ່ງເອເດນເພື່ອຮັກສາ ແລະ ເບິ່ງແຍງສວນ.[16]ພຣະຢາເວ ພຣະເຈົ້າສັ່ງລາວວ່າ,
"ເຈົ້າສາມາດກິນຫມາກໄມ້ທຸກຕົ້ນທີ່ຢູ່ໃນສວນນີ້.[17]ຍົກເວັ້ນຫມາກຈາກຕົ້ນໄມ້ແຫ່ງຄວາມຮູ້ດີ ແລະ ຊົ່ວເຈົ້າຢ່າໄດ້ກິນ,
ເພາະວ່າໃນວັນທີ່ເຈົ້າຂືນກິນເຈົ້າຈະຕ້ອງຕາຍແນ່ນອນ."
[18]ພຣະເຈົ້າໄດ້ກ່າວວ່າ, "ບໍ່ເປັນການດີທີ່ຜູ້ຊາຍຈະຢູ່ຄົນດຽວ. ເຮົາຈະສ້າງຜູ້ຊ່ວຍເຫລືອທີ່ເຫມາະສົມສຳລັບເຂົາ."[19]ພຣະຢາເວ
ພຣະເຈົ້າຈຶ່ງເອົາຂີ້ດິນຈາກພື້ນດິນຊົງສ້າງສັດທຸກຕົວຂອງທ້ອງທົ່ງ ແລະ ນົກທຸກຕົວຂອງທ້ອງຟ້າ.
ຈາກນັ້ນພຣະອົງກໍໄດ້ນຳພວກມັນມາໃຫ້ມະນຸດເພື່ອເບິ່ງວ່າເຂົາຈະເອີ້ນພວກມັນວ່າຢ່າງໃດ.
ບໍ່ວ່າຜູ້ຊາຍນັ້ນຈະເອີ້ນສິ່ງມີຊີວິດແຕ່ລະຊະນິດນັ້ນວ່າຢ່າງໃດ, ນັ້ນກໍຄືຊື່ຂອງພວກສັດເຫລົ່ານັ້ນ.[20]ຜູ້ຊາຍໄດ້ຕັ້ງຊື່ໃຫ້ບັນດາສັດລ້ຽງ, ແລະ
ນົກທັງຫລາຍຂອງທ້ອງຟ້າ ແລະພວກສັດປ່າຂອງທ້ອງທົ່ງ. ແຕ່ສຳລັບຕົວຜູ້ຊາຍເອງນັ້ນບໍ່ພົບວ່າມີຜູ້ຊ່ວຍເຫລືອທີ່ເຫມາະສົມສຳລັບເຂົາ.
[21]ພຣະຢາເວ ພຣະເຈົ້າໄດ້ເຮັດໃຫ້ຜູ້ຊາຍນອນຫລັບສະຫນິດ, ດັ່ງນັ້ນຜູ້ຊາຍນັ້ນຈຶ່ງນອນຫລັບ.
ພຣະຢາເວພຣະເຈົ້າໄດ້ເອົາກະດູກຂ້າງອັນຫນຶ່ງຂອງເຂົາອອກມາ ແລະ ຊົງເຮັດໃຫ້ເນື້ອຫນັງຊົງຕິດຈອດກັນດັ່ງເດີມ.
[22]ດ້ວຍດູກຂ້າງທີ່ຫັກອອກມາຈາກຜູ້ຊາຍນັ້ນພຣະຢາເວ ພຣະເຈົ້າໄດ້ຊົງສ້າງຜູ້ຍິງ ແລະ ຊົງນຳນາງມາມອບໃຫ້ລາວ.[23]ຜູ້ຊາຍນັ້ນໄດ້ເວົ້າວ່າ,
"ນີ້ແຫລະ ນີ້ຄືກະດູກຂອງກະດູກຂອງເຮົາ, ແລະ ເນື້ອຫນັງຈາກເນື້ອຫນັງຂອງເຮົາ ເຂົາຈະຖືກເອີ້ນວ່າ. 'ຜູ້ຍິງ,'
ເພາະວ່າເຂົາຖືກນຳອອກມາຈາກຜູ້ຊາຍ."
[24]ດັ່ງນັ້ນຜູ້ຊາຍຈຶ່ງຈາກພໍ່ແມ່ຂອງເຂົາ, ເຂົາຈະຮ່ວມເປັນຫນຶ່ງດຽວກັນກັບເມຍຂອງເຂົາ, ແລະ ພວກເຂົາຈະກາຍເປັນເນື້ອດຽວກັນ.[25]ຜູ້ຊາຍ
ແລະ ເມຍຂອງເຂົາພວກເຂົາທັງສອງເປືອຍກາຍຢູ່ແຕ່ບໍ່ອາຍກັນ.

 generated on Tue Jun 17 19:01:42 2025

3 [1]ສ່ວນງູນັ້ນເປັນສັດທີ່ສະຫລາດກ່ວາສັດອື່ນໆທີ່ພຣະຢາເວ ພຣະເຈົ້າໄດ້ຊົງສ້າງ. ມັນຖາມຜູ້ຍິງນັ້ນວ່າ, "ພຣະເຈົ້າເວົ້າແທ້ໆບໍ່ວ່າ
ບໍ່ໃຫ້ເຈົ້າກິນຫມາກໄມ້ໃດໆໃນສວນນີ້?"[2]ຜູ້ຍິງນັ້ນຕອບງູວ່າ, "ພວກເຮົາສາມາດກິນຫມາກໄມ້ຈາກຕົ້ນໄມ້ຫມາກທັງຫລາຍໃນສວນນີ້,
[3]ແຕ່ຍົກເວັ້ນຫມາກຂອງຕົ້ນໄມ້ຊຶ່ງຢູ່ກາງສວນນັ້ນ, ພຣະເຈົ້າກ່າວໄວ້ວ່າ, 'ເຈົ້າຈົ່ງຢ່າໄດ້ກິນ ຫລືແຕະຕ້ອງມັນ, ບໍ່ດັ່ງນັ້ນເຈົ້າຈະຕາຍ.'"

[4]ງູເວົ້າກັບຜູ້ຍິງນັ້ນວ່າ,"ເຈົ້າຈະບໍ່ຕາຍດອກ.[5]ເພາະພຣະເຈົ້າຮູ້ວ່າໃນວັນທີ່ເຈົ້າກິນຫມາກໄມ້ນັ້ນດວງຕາຂອງເຈົ້າຈະຖືກເປີດອອກ
ແລະເຈົ້າຈະເປັນເຫມືອນພຣະເຈົ້າ, ຄືຮູ້ເຖິງຄວາມດີ ແລະຄວາມຊົ່ວ."[6]ເມື່ອຜູ້ຍິງນັ້ນໄດ້ເຫັນວ່າຕົ້ນໄມ້ນັ້ນດີທີ່ຈະເປັນອາຫານ,
ແລະມັນກໍຫນ້າເບິ່ງ, ແລະຕົ້ນໄມ້ນັ້ນກໍເປັນສິ່ງທີ່ຈະເຮັດໃຫ້ສະຫລາດຂຶ້ນ, ນາງຈຶ່ງໄດ້ເກັບຫມາກຈໍານວນຫນຶ່ງຂອງຕົ້ນໄມ້ນັ້ນແລະກິນ.
ຈາກນັ້ນນາງຈຶ່ງໃຫ້ຫມາກໄມ້ບາງສ່ວນແກ່ຜົວຂອງນາງຜູ້ທີ່ຢູ່ກັບລາວແລະເຂົາກໍກິນຫມາກໄມ້ນັ້ນດ້ວຍ.
[7]ດວງຕາຂອງພວກເຂົາທັງສອງກໍຖືກເປີດອອກ, ແລະພວກເຂົາກໍຮູ້ວ່າພວກເຂົາໄດ້ເປືອຍກາຍຢູ່. ພວກເຂົາໄດ້ຫຍິບໃບຫມາກເດື່ອເຂົ້າດ້ວຍກັນ
ແລະເຮັດເປັນສິ່ງທີ່ໃຊ້ປົກຄຸມສໍາລັບພວກເຂົາ.[8]ໃນຕອນຄໍ່າພວກເຂົາໄດ້ຍິນສຽງພຣະຢາເວ
ພຣະເຈົ້າກໍາລັງຍ່າງຢູ່ໃນສວນດັ່ງນັ້ນຜູ້ຊາຍແລະເມຍຂອງເຂົາໄດ້ໄປລີ້ຕົວໃຫ້ພົ້ນຈາກພຣະພັກພຣະຢາເວພຣະເຈົ້າຢູ່ທ່າມກາງຕົ້ນໄມ້ທັງຫລາຍໃນສວນ.
[9]ພຣະຢາເວພຣະເຈົ້າໄດ້ເອີ້ນຫາຜູ້ຊາຍນັ້ນແລະເວົ້າກັບເຂົາວ່າ," ເຈົ້າຢູ່ໃສ?"[10]ຜູ້ຊາຍຕອບວ່າ," ຂ້ານ້ອຍໄດ້ຍິນສຽງພຣະອົງໃນສວນ; ແລະ
ຂ້ານ້ອຍຢ້ານ ເພາະຂ້ານ້ອຍປະເປືອຍຢູ່. ດັ່ງນັ້ນຂ້ານ້ອຍຈຶ່ງໄດ້ລີ້ຢູ່."[11]ພຣະອົງເຈົ້າເວົ້າວ່າ, "ໃຜບອກເຈົ້າວ່າເຈົ້າເປືອຍກາຍຢູ່?
ເຈົ້າໄດ້ກິນຫມາກໄມ້ທີ່ເຮົາ ໄດ້ຫ້າມເຈົ້າບໍ່ໃຫ້ກິນແລ້ວບໍ?"
[12]ຜູ້ຊາຍຕອບວ່າ, "ຜູ້ຍິງຜູ້ ທີ່ພຣະອົງໃຫ້ຢູ່ກັບຂ້ານ້ອຍນັ້ນ, ເປັນຜູ້ໃຫ້ຫມາກໄມ້ຈາກຕົ້ນນັ້ນໃຫ້ຂ້ານ້ອຍແລະ ຂ້ານ້ອຍ
ກໍໄດ້ກິນມັນ."[13]ພຣະຢາເວພຣະເຈົ້າ ເວົ້າກັບຜູ້ຍິງນັ້ນ ວ່າ, "ເຈົ້າໄດ້ເຮັດຫຍັງລົງໄປນີ້?" ຜູ້ຍິງນັ້ນຕອບວ່າ,
"ງູໄດ້ລໍ້ລວງຂ້ານ້ອຍຂ້ານ້ອຍຈຶ່ງໄດ້ກິນ."
[14]ພຣະຢາເວພຣະເຈົ້າ, "ກ່າວ ແກ່ງູນັ້ນວ່າ, "ເພາະວ່າມຶງໄດ້ເຮັດສິ່ງນີ້, ມຶງຈຶ່ງຖືກ ສາບແຊ່ງ, ທ່າມກາງສັດໃຊ້ງານທັງຫມົດ
ແລະສັດປ່າທັງຫລາຍມຶງຈະເລືອຄ້ວຍທ້ອງຂອງມຶງ, ແລະ ຜົງຂີ້ຝຸ່ນດິນຈະເປັນສິ່ງທີ່ມຶງຕ້ອງກິນໄປ ຕະຫລອດຊີວິດຂອງມຶງ.
[15]ເຮົາຈະໃຫ້ຄວາມກຽດຊັງກັນ, ລະຫວ່າງມຶງກັບຜູ້ຍິງ ແລະລະຫວ່າງເຊື້ອສາຍຂອງມຶງ ແລະ ເຊື້ອສາຍຂອງຍິງ.
ເຂົາຈະເຮັດໃຫ້ຫົວຂອງມຶງແຕກຫມຸ່ນ, ແລະ ມຶງກໍຈະກັດສົ້ນຫນ່ອງເຂົາໃຫ້ບວບຊໍ້າ."
[16]ພຣະອົງກ່າວກັບຍິງນັ້ນວ່າ, "ເຮົາຈະເພີ່ມຄວາມເຈັບປວດຢ່າງຫລວງຫລາຍໃຫ້ແກ່ເຈົ້າ, ໃນຂະນະທີ່ເຈົ້າຈະມີລູກ;
ມັນເປັນຄວາມເຈັບປວດທີ່ເຈົ້າຈະອອກລູກທັງຫລາຍ. ຄວາມປາຖະຫນາຂອງເຈົ້າຈະເຮັດເພື່ອຜົວຂອງເຈົ້າ,
ແຕ່ຜົວຂອງເຈົ້ານັ້ນຈະເປັນນາຍເຫນືອເຈົ້າ."
[17]ພຣະອົງກ່າວກັບອາດາມວ່າ, "ເພາະວ່າເຈົ້າຟັງສຽງເມຍຂອງເຈົ້າ; ແລະ ກິນຫມາກໄມ້ນັ້ນ, ແລະ ຕາມທີ່ເຮົາສັ່ງເຈົ້າວ່າ,
'ເຈົ້າຢ່າກິນຫມາກຈາກຕົ້ນໄມ້ນັ້ນ,' ແຜ່ນດິນຈະຖືກສາບແຊ່ງເພາະເຈົ້າ;
ເຈົ້າຈະຫາລ້ຽງຊີບດ້ວຍການເຮັດວຽກທຸກລໍາບາກແສນເຂັນຕະຫລອດຊີວິດຂອງເຈົ້າ.[18]ແຜ່ນດິນຈະເກີດຕົ້ນໄມ້ທີ່ມີຫນາມ
ແລະພືດທີ່ມີຫນາມໃຫ້ເຈົ້າ, ແລະ ເຈົ້າຈະໄດ້ກິນພືດໃນປ່າເປັນອາຫານ.[19]ເຈົ້າຈະໄດ້ກິນອາຫານໂດຍຢາດເຫື່ອ,
ຂອງໃບຫນ້າຂອງເຈົ້າຈົນກວ່າເຈົ້າຄືນໄປສູ່ດິນທີ່ເຈົ້າຖືກສ້າງຂຶ້ນມາ; ເພາະເຈົ້າເປັນຜົງຂີ້ດິນ, ແລະ ເຈົ້າຈະຄືນໄປເປັນ ຜົງຂີ້ດິນອີກ."
[20]ອາດາມໄດ້ເອີ້ນຊື່ ເມຍຂອງຕົນວ່າເອວາ ເພາະນາງເປັນແມ່ຂອງສິ່ງທີ່ມີຊີວິດທັງຫລາຍ.[21]ພຣະຢາເວພຣະເຈົ້າໄດ້ເຮັດເສື້ອຜ້າດ້ວຍ
ຫນັງສັດສໍາລັບອາດາມ ແລະ ເມຍຂອງເຂົາ ແລະ ສວມໃຫ້ພວກເຂົາ.
[22]ພຣະຢາເວພຣະເຈົ້າກ່າວວ່າ, "ບັດນີ້ມະນຸດໄດ້ກາຍເປັນຄົນຫນຶ່ງເຫມືອນພວກເຮົາ, ໃນຄວາມຮູ້ຈັກຄວາມດີ ແລະ ຮູ້ຈັກຄວາມຊົ່ວ.
ດັ່ງນັ້ນຕັ້ງແຕ່ນີ້ໄປເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ພວກເຂົາຍື່ມື, ໄປປິດເອົາຫມາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ, ແລະ ກິນ ແລະ
ມີຊີວິດຕະຫລອດໄປ."[23]ສະນັ້ນ ພຣະຢາເວພຣະເຈົ້າຈຶ່ງຊົງສົ່ງເຂົາອອກໄປຈາກສວນເອເດນ,
ເພື່ອຂຸດດິນປູກຝັງເທິງພື້ນດິນໃນບ່ອນທີ່ພວກເຂົາໄດ້ຖືກສ້າງຂຶ້ນມາ.[24]ພຣະເຈົ້າໄດ້ຊົງຂັບໄລ່ຜູ້ຊາຍອອກຈາກສວນ,
ແລ້ວພຣະອົງໄດ້ຊົງຕັ້ງພວກເຄຣຸບ ໄວ້ທາງທິດຕາເວັນອອກຂອງສວນແຫ່ງເອເດນ, ແລະ ດາບທີ່ລຸກເປັນແສງໄຟແກວ່ງໄປມາ,
ຮອບທຸກທິດທາງເພື່ອເຝົ້າທາງເຂົ້າໄປເຖິງຕົ້ນໄມ້ແຫ່ງຊີວິດ.

# 4

1ອາດາມໄດ້ສົມສູ່ກັບເມຍຂອງເຂົາ. ນາງກໍໄດ້ຖືພາ ແລະ ໃຫ້ກຳເນີດກາອິນ. ນາງກ່າວວ່າ,
"ນາງເກີດລູກຊາຍຜູ້ຫນຶ່ງໂດຍການຊ່ວຍເຫລືອຂອງພຣະຢາເວ"2 ແລ້ວຈາກນັ້ນນາງກໍໄດ້ລູກຊາຍອີກຊື່ວ່າອາເບັນ ນ້ອງຊາຍຂອງເຂົາ.
ສ່ວນອາເບັນກາຍເປັນຄົນລ້ຽງແກະ, ແຕ່ກາອິນນັ້ນເປັນຄົນປູກພືດຜັກ.

3ຢູ່ມາວັນຫນຶ່ງ ກາອິນໄດ້ນຳຜົນແຫ່ງພື້ນດິນມາຖວາຍພຣະຢາເວ.4ສ່ວນອາເບັນນັ້ນ ລາວໄດ້ນຳເອົາລູກແກະຫົວປີຈາກຝູງແກະ
ແລະໄຂມັນບາງສ່ວນມາຖວາຍ. ພຣະຢາເວໄດ້ຍອມຮັບອາເບັນ ແລະ ຂອງຖວາຍຂອງເຂົາ,5ແຕ່ກາອິນ ແລະ
ຂອງຖວາຍຂອງເຂົານັ້ນພຣະອົງບໍ່ຍອມຮັບ. ດັ່ງນັ້ນກາອິນຈຶ່ງຄຽດຫລາຍ, ແລະ ເຂົາເຮັດຫນ້າບູດບຶ້ງ.
6ພຣະຢາເວກ່າວກັບກາອິນວ່າ, "ເຈົ້າເປັນຫຍັງຈຶ່ງຄຽດແຄ້ນ ແລະ ຫນ້າຕາບູດບຶ້ງ?7ຖ້າເຈົ້າເຮັດໃນສິ່ງທີ່ຖືກຕ້ອງ,
ເຈົ້າຈະບໍ່ໄດ້ຮັບການຍອມຮັບບໍ? ແຕ່ຫາກເຈົ້າເຮັດໃນສິ່ງທີ່ບໍ່ຖືກຕ້ອງ, ຄວາມບາບກຳລັງລໍຢູ່ທີ່ປະຕູ ແລະ ປາຖະຫນາທີ່ຈະຄວບຄຸມເຈົ້າ,
ແຕ່ເຈົ້າຕ້ອງເອົາຊະນະມັນ."
8ກາອິນໄດ້ເວົ້າກັບອາເບັນນ້ອງຊາຍຂອງຕົນ. ໃນຂະນະທີ່ພວກເຂົາຢູ່ໃນທົ່ງນາ, ກາອິນໄດ້ລຸກຂຶ້ນທຳຮ້າຍອາເບັນ. ນ້ອງຊາຍຂອງຕົນ ແລະ
ຂ້າລາວເສຍ.9ແລ້ວພຣະຢາເວໄດ້ຊົງຖາມກາອິນວ່າ, "ອາເບັນນ້ອງຊາຍຂອງເຈົ້າຢູ່ໃສ?" ລາວຈຶ່ງຕອບວ່າ, "ຂ້ານ້ອຍບໍ່ຮູ້.
ຂ້ານ້ອຍເປັນຜູ້ດູແລນ້ອງຊາຍຂອງຂ້ານ້ອຍບໍ?"
10ແລ້ວພຣະຢາເວກໍຖາມວ່າ, "ເຈົ້າໄດ້ເຮັດ ຫຍັງໂຫດຮ້າຍເຊັ່ນນີ້? ເລືອດ ຂອງນ້ອງຊາຍ ເຈົ້າຈາກພື້ນດິນຟ້ອງເຖິງເຮົາ.11ບັດນີ້ເຈົ້າ
ໄດ້ຖືກສາບແຊ່ງຈາກແຜ່ນດິນຊຶ່ງອ້າປາກຮັບເລືອດນ້ອງຊາຍຂອງເຈົ້າ, ຈາກມືຂອງເຈົ້າຕັ້ງແຕ່ນີ້ໄປ.
12ເມື່ອເຈົ້າໄຖພວນດິນປູກຝັງຈະບໍ່ເກີດຜົນຫຍັງ, ເຈົ້າຈະເປັນຜູ້ທີ່ຫລົບຫນີແລະພະເນຈອນໄປເທິງແຜ່ນດິນ."
13ກາອິນທູນກັບພຣະຢາເວວ່າ, "ໂທດຂອງຂ້ານ້ອຍກໍໃຫຍ່ຫລວງຫນັກເກີນກວ່າທີ່ຂ້ານ້ອຍຈະຮັບໄດ້.14ຄວາມຈິງແລ້ວ, ວັນນີ້
ພຣະອົງໄດ້ຂັບໄລ່ຂ້ານ້ອຍອອກຈາກແຜ່ນດິນນີ້ ແລະ ຂ້ານ້ອຍຈະຫລົບຊ້ອນຈາກພຣະພັກພຣະອົງ. ຂ້ານ້ອຍຈະເປັນຜູ້ທີ່ຫລົບຫນີ ແລະ
ພະເນຈອນໄປໃນແຜ່ນດິນ ແລະ ຜູ້ໃດກໍຕາມທີ່ພົບຂ້ານ້ອຍກໍຈະຂ້າ ຂ້ານ້ອຍເສຍ."15ພຣະຢາເວໄດ້ກ່າວກັບເຂົາວ່າ, "ຖ້າຜູ້ໃດຂ້າກາອິນ,
ຜູ້ນັ້ນຈະໄດ້ຮັບໂທດເຈັດເທົ່າ, ເພື່ອເປັນການແກ້ແຄ້ນ." ຈາກນັ້ນພຣະຢາເວໄດ້ເຮັດເຄື່ອງຫມາຍໄວ້ໃນຕົວກາອິນ,
ເຫດນັ້ນຖ້າຜູ້ໃດພົບລາວຜູ້ນັ້ນຈະບໍ່ໄດ້ທຳຮ້າຍລາວ.
16ດັ່ງນັ້ນກາອິນຈຶ່ງໄດ້ອອກໄປພົ້ນ ພຣະພັກພຣະຢາເວ ແລະອາໄສຢູ່ໃນດິນແດນນົດ, ທາງທິດຕາເວັນອອກຂອງເອເດນ.
17ກາອິນໄດ້ຫລັບນອນກັບເມຍຂອງລາວ ແລະ ນາງກໍຖືພານາງໄດ້ເກີດລູກຊາຍຊື່ວ່າເອນົກ. ລາວໄດ້ສ້າງເມືອງຫນຶ່ງຂຶ້ນ ແລະ
ຕັ້ງຊື່ເມືອງນັ້ນຕາມຊື່ລູກຊາຍຂອງຕົນ ຄືເອນົກ.
18ເອນົກມີລູກຊາຍຊື່ອີຣາດ. ອີຣາດຜູ້ທີ່ເປັນພໍ່ຂອງເມຮູຢາເອນ, ເມຮູຢາເອນເປັນພໍ່ຂອງເມທູຊາເອນ. ເມທູຊາເອນເປັນພໍ່ຂອງລາເມັກ.
19ລາເມັກມີເມຍສອງຄົນ: ຄົນຫນຶ່ງຊື່ອາດາ ອີກຄົນຫນຶ່ງຊື່ຊິນລາ.
20ອາດາໃຫ້ກຳເນີດລູກຊາຍຊື່ຢາບານ. ເຂົາເປັນບັນພະບຸຣຸດຂອງຄົນທັງຫລາຍທີ່ ອາໄສຢູ່ໃນຜ້າເຕັນຜູ້ຊຶ່ງເປັນຄົນລ້ຽງສັດ.
21ນ້ອງຊາຍຂອງເຂົາຊື່ຢາບານ. ເຂົາເປັນບັນພະບຸຣຸດ ຂອງຄົນເຫລົ່ານັ້ນຄື: ນັກດີດພິນເຂົາຂູ່ ແລະເປົ່າປີ່.22ສຳລັບຊິນລາ, ນາງກໍເກີດ
ຕູບາກາອິນ. ຜູ້ເປັນຊ່າງຕີເຄື່ອງມືເປັນທອງສຳຣິດ ແລະເຫລັກ. ນ້ອງສາວຂອງຕູບາກາອິນຊື່ວ່ານາອາມາ.
23ລາເມັກໄດ້ເວົ້າກັບເມຍ ທັງສອງຂອງເຂົາວ່າ,"ອາດາ ແລະຊິນລາຈົ່ງຟັງສຽງຂອງເຮົາເຈົ້າຜູ້ເປັນເມຍຂອງລາເມັກ,
ຈົ່ງຟັງໃນສິ່ງທີ່ເຮົາເລົ່າເພາະເຮົາໄດ້ຂ້າຜູ້ຊາຍຜູ້ຫນຶ່ງ ທີ່ເຮັດໃຫ້ ເຮົາບາດເຈັບຊາຍຫນຸ່ມຄົນຫນຶ່ງຜູ້ທີ່ເຮັດໃຫ້ເຮົາຊ້ຳບວມ.
24ຖ້າຜູ້ໃດທີ່ເຮັດກັບກາອິນຈະຖືກແກ້ແຄ້ນເຈັດເທົ່າ, ດັ່ງນັ້ນຖ້າຜູ້ໃດເຮັດກັບລາເມັກກໍ ຈະຖືກແກ້ແຄ້ນຕອບແທນເຖິງເຈັດສິບເຈັດ ເທົ່າ."
25ອາດາມໄດ້ຫລັບນອນກັບເມຍຂອງເຂົາແລະນາງໄດ້ເກີດລູກຊາຍອີກຜູ້ຫນຶ່ງ. ນາງເອີ້ນຊື່ເຂົາວ່າ ເຊດ, ແລະເວົ້າວ່າ"ພຣະເຈົ້າໄດ້ຊົງໃຫ້
ລູກຊາຍອີກຜູ້ຫນຶ່ງ, ໃຫ້ແກ່ຂ້ານ້ອຍແທນອາເບັນຜູ້ທີ່ກາອິນໄດ້ຂ້າ."26ເຊດມີລູກຊາຍ ແລະເຂົາໄດ້ເອີ້ນຊື່ວ່າເອໂນດ. ຕັ້ງແຕ່ນັ້ນ
ມາຄົນທັງຫລາຍໄດ້ເລີ່ມຕົ້ນຮ້ອງທູນອອກພຣະນາມຂອງພຣະຢາເວ.

 generated on Tue Jun 17 19:01:42 2025

5 [1]ນີ້ຄືບັນທຶກຂອງເຊື້ອສາຍຂອງອາດາມ. ໃນວັນທີ່ພຣະເຈົ້າໄດ້ສ້າງມະນຸດ, ພຣະອົງໄດ້ສ້າງພວກເຂົາຕາມພຣະລັກສະນະຂອງພຣະອົງ.
[2]ພຣະອົງຊົງສ້າງພວກເຂົາເປັນຊາຍ ແລະຍິງ, ເມື່ອພວກເຂົາໄດ້ຖືກສ້າງພຣະອົງຊົງ ອວຍພອນພວກເຂົາແລະໄດ້ຊົງເອີ້ນພວກເຂົາວ່າມະນຸດ.

[3]ເມື່ອອາດາມອາຍຸໄດ້ 130 ປີ, ລາວມີລູກຊາຍຜູ້ຫນຶ່ງໃນລັກຊະນະຕາມຮູບແບບຂອງລາວ, ແລະ ຕັ້ງຊື່ເຂົາວ່າເຊດ.
[4]ຫລັງຈາກອາດາມໄດ້ກາຍເປັນພໍ່ຂອງເຊດແລ້ວ, ເຂົາຍັງມີອາຍຸຍືນຍາວມາອີກ 800 ປີ. ເຂົາໄດ້ມີລູກຊາຍຍິງອີກຫລາຍຄົນ.[5]ອາດາມມີ
ອາຍຸໄດ້ 930 ປີ, ແລ້ວຈາກນັ້ນເຂົາກໍໄດ້ຕາຍໄປ.
[6]ເມື່ອເຊດມີອາຍຸໄດ້ 105 ປີ, ລາວໄດ້ມີລູກຊາຍຊື່ເອໂນດ.[7]ຫລັງຈາກເຂົາໄດ້ໃຫ້ເອໂນດເກີດມາແລ້ວເຂົາໄດ້ມີອາຍຸຍືນຍາວມາ ອີກ 807 ປີ
ແລະ ລາວໄດ້ມີລູກຊາຍ ແລະ ຍິງ ຫລາຍຄົນ.[8]ເຊດມີອາຍຸໄດ້ 912 ປີ, ແລະຈາກນັ້ນລາວກໍໄດ້ຕາຍໄປ.
[9]ເມື່ອເອໂນດອາຍຸໄດ້ 90 ປີ, ລາວໄດ້ລູກຊາຍຜູ້ຫນຶ່ງຊື່ເກນານ.[10]ຫລັງຈາກເຂົາໄດ້ເກນານແລ້ວ, ເອໂນດໄດ້ມີອາຍຸຍືນຍາວມາອີກ 815 ປີ.
ເຂົາໄດ້ມີລູກຊາຍ ແລະ ຍິງຫລາຍຄົນ.[11]ເອໂນດມີອາຍຸໄດ້ 905 ປີ. ແລະ ຈາກນັ້ນລາວກໍຕາຍໄປ.
[12]ເມື່ອເກນານມີອາຍຸ ໄດ້ 70 ປີ. ລາວໄດ້ລູກຊາຍຊື່ມະຫາລາເລນ.[13]ຫລັງຈາກເຂົາໄດ້ມະຫາລາເລນແລ້ວເກນານໄດ້ມີອາຍຸຍືນຍາວ ມາອີກ
840 ປີ. ເຂົາໄດ້ມີລູກຊາຍ ແລະຍິງອີກຫລາຍຄົນ.[14]ເກນານມີອາຍຸໄດ້ 910ປີ, ແລະຈາກນັ້ນລາວກໍຕາຍໄປ.
[15]ເມື່ອມະຫາລາເລນອາຍຸ ໄດ້ 65 ປີ, ລາວໄດ້ລູກຊາຍຊື່ ຢາເຣັດ.[16]ຫລັງຈາກເຂົາໄດ້ຢາເຣັດແລ້ວ, ມະຫາລາເລນໄດ້ມີອາຍຸຍືນຍາວມາອີກ
830 ປີ. ເຂົາໄດ້ມີລູກຊາຍ ແລະຍິງຕື່ມອີກຫລາຍຄົນ.[17]ມະຫາລາເລນມີອາຍຸໄດ້ 895 ປີ, ແລະຈາກນັ້ນລາວກໍຕາຍໄປ.
[18]ເມື່ອຢາເຣັດມີອາຍຸໄດ້ 162 ປີ, ລາວໄດ້ມີລູກຊາຍຊື່ເອນົກ.[19]ຫລັງຈາກລາວກາຍເປັນພໍ່ຂອງເອນົກແລ້ວ, ຢາເຣັດໄດ້ມີອາຍຸຍືນຍາວມາອີກ
800 ປີ. ເຂົາໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນ.[20]ຢາເຣັດມີອາຍຸໄດ້ 962 ປີ, ແລະ ຈາກນັ້ນລາວກໍໄດ້ຕາຍໄປ.
[21]ເອນົກ ອາຍຸໄດ້ 65 ປີ. ລາວໄດ້ມີລູກຊາຍຊື່ວ່າ ເມທູເສລາ.[22]ເອນົກດໍາເນີນຊີວິດກັບພຣະເຈົ້າ 300 ປີ
ຫລັງຈາກລາວໄດ້ເມທູເສລາແລ້ວລາວຍັງມີລູກຊາຍ ແລະຍິງຕື່ມອີກຫລາຍຄົນ.[23]ເອນົກມີອາຍຸໄດ້365 ປີ.
[24]ເອນົກໄດ້ດໍາເນີນຊີວິດຕິດສະຫນິດກັບພຣະເຈົ້າ, ແລະ ຈາກນັ້ນລາວກໍໄດ້ຈາກໄປ, ເພາະພຣະເຈົ້າໄດ້ຊົງຮັບເອົາລາວໄປ.
[25]ເມື່ອເມທູເສລາອາຍຸໄດ້ 187 ປີ, ລາວໄດ້ມີລູກຊາຍຊື່ວ່າ ລາເມັກ.[26]ຫລັງຈາກລາວໄດ້ລູກຊາຍລາເມັກແລ້ວ, ເມທູເສລາມີອາຍຸຍືນຍາວມາອີກ
782 ປີ. ເຂົາໄດ້ມີລູກຊາຍ ແລະຍິງອີກຫລາຍຄົນ.[27]ເມທູເສລາມີອາຍຸໄດ້ 969 ປີ. ຫລັງຈາກນັ້ນລາວກໍໄດ້ຕາຍໄປ.
[28]ເມື່ອລາເມັກມີອາຍຸໄດ້ 182 ປີ, ລາວໄດ້ມີລູກຊາຍຜູ້ຫນຶ່ງ[29]ແລະ ລາວໄດ້ຕັ້ງຊື່ຂອງເຂົາວ່າ ໂນອາ, ເພາະວ່າເດັກນ້ອຍຄົນນີ້
"ຈະເຮັດໃຫ້ພວກເຮົາພັກຈາກວຽກງານຂອງເຮົາ ແລະຈາກການທໍາງານທີ່ລໍາບາກຂອງມືຂອງເຮົາ, ຊຶ່ງເຮົາຕ້ອງເຮັດ,
ເພາະແຜ່ນດິນທີ່ພຣະຢາເວໄດ້ສາບແຊ່ງຫລັງຈາກລາວໄດ້ໃຫ້ໂນອາເກີດມາແລ້ວ."
[30]ລາເມັກມີອາຍຸຍືນຍາວມາອີກ 595 ປີເຂົາໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນ.[31]ເມື່ອລາເມັກມີອາຍຸໄດ້ 777 ປີ.
ຈາກນັ້ນລາວກໍໄດ້ຕາຍໄປ.
[32]ຫລັງຈາກໂນອາມີອາຍຸໄດ້ 500 ປີລາວມີລູກຊາຍສາມຄົນຄື: ເຊມ, ຮາມ ແລະ ຢາເຟດ.


generated on Tue Jun 17 19:01:42 2025

6 [1]ສິ່ງນີ້ໄດ້ເກີດຂຶ້ນເມື່ອ ມະນຸດໄດ້ເພີ່ມທະວີຫລາຍຂຶ້ນຢູ່ໃນທົ່ວແຜ່ນດິນ ແລະ ໃຫ້ເກີດລູກສາວທັງຫລາຍແກ່ພວກເຂົາ,
[2]ລູກຊາຍທັງຫລາຍຂອງພຣະເຈົ້າ ໄດ້ເຫັນວ່າລູກສາວທັງຫລາຍຂອງມະນຸດສວຍງາມຈັບໃຈ. ພວກເຂົາໄດ້ເລືອກ ແລະ
ຮັບເອົາຍິງເຫລົ່ານັ້ນເປັນເມຍ.[3]ພຣະຢາເວກ່າວວ່າ, "ວິນຍານຂອງເຮົາຈະບໍ່ຢູ່ກັບມະນຸດຕະຫລອດໄປ,
ເພາະພວກເຂົາເປັນເນື້ອຫນັງພວກເຂົາຈະມີອາຍຸພຽງ 120 ປີ."

[4]ເກີດມີຄົນຮູບຮ່າງໃຫຍ່ທີ່ເທິງ ແຜ່ນດິນໂລກໃນເວລານັ້ນ, ແລະ ຫລັງຈາກນັ້ນດ້ວຍ.
ນີ້ເກີດເມື່ອລູກຊາຍທັງຫລາຍຂອງພຣະເຈົ້າໄດ້ແຕ່ງງານກັບບັນດາລູກສາວຂອງມະນຸດ, ແລະ ພວກເຂົາມີລູກ.
ຄົນເຫລົ່ານີ້ແມ່ນຜູ້ຊາຍທີ່ແຂງແຮງ, ເປັນຄົນທີ່ມີຊື່ສຽງດີໃນສະໄຫມບູຮານ.
[5]ພຣະຢາເວຊົງເຫັນວ່າຄວາມຊົ່ວຮ້າຍ ຂອງມະນຸດມີຫລາຍຍິ່ງຂຶ້ນ,
ແລະຄວາມຄິດໃນຈິດໃຈທຸກຢ່າງຂອງພວກເຂົາກໍບັງຄັບໄປໃນສິ່ງຊົ່ວຮ້າຍຢູ່ທຸກເວລາ.
[6]ພຣະຢາເວຊົງເສຍໃຈຫລາຍທີ່ພຣະອົງໄດ້ຊົງສ້າງມະນຸດຂຶ້ນເທິງແຜ່ນດິນໂລກ, ແລະເຮັດໃຫ້ພຣະອົງກິນແຫນງໃຈຫລາຍ.
[7]ດັ່ງນັ້ນພຣະຢາເວໄດ້ກ່າວວ່າ, "ເຮົາຈະກວາດລ້າງມະນຸດຜູ້ທີ່ເຮົາໄດ້ສ້າງເສຍ ຈາກພື້ນແຜ່ນດິນໂລກ; ທັງມະນຸດກັບສັດໃຫຍ່, ແລະ
ສິ່ງຕ່າງໆທີ່ເລືອຍຄານ ແລະ ນົກທັງຫລາຍຂອງທ້ອງຟ້າ,
ເພາະເຮົາເສຍໃຈທີ່ໄດ້ສ້າງພວກເຂົາທັງຫລາຍ."[8]ແຕ່ໂນອາເປັນທີ່ພໍໃຈໃນສາຍຕາຂອງພຣະຢາເວ.
[9]ປະຫວັດເຫລົ່ານີ້ເປັນເຫດການກຽວຂ້ອງກັບໂນອາ. ໂນອາເປັນຄົນຊອບທັມ, ແລະ ບໍ່ມີຕໍາຫນິທ່າມກາງຄົນທັງຫລາຍໃນເວລາຂອງລາວນັ້ນ.
ໂນອາໄດ້ດໍາເນີນຊີວິດໃນຄວາມສາມັກຄີທັມ ຕິດສະຫນິດກັບພຣະເຈົ້າ.[10]ໂນອາມີລູກຊາຍສາມຄົນຄື: ເຊມ, ຮາມ, ແລະ ຢາເຟດ.
[11]ແຜ່ນດິນຖືກເຮັດໃຫ້ເຊື່ອມຊາມລົງໃນສາຍຕາຂອງພຣະເຈົ້າ, ແລະ ເຕັມໄປດ້ວຍຄວາມໂຫດຮ້າຍຮຸນແຮງລາມໄປທົ່ວ.
[12]ພຣະເຈົ້າຊົງເບິ່ງພື້ນແຜ່ນດິນໂລກ; ແລະ ເຫັນວ່າຊົ່ວຮ້າຍລົງ,
ເພາະວ່າຍ້ອນມະນຸດທັງປວງເຮັດແຕ່ຄວາມຊົ່ວຊ້າລົງເທິງທາງຂອງພວກເຂົາທັງຫລາຍເທິງແຜ່ນດິນ.
[13]ພຣະເຈົ້າໄດ້ບອກກັບໂນອາວ່າ,"ເຮົາເຫັນວ່າເຖິງເວລາແລ້ວທີ່ຈະນໍາຈຸດຈົບມາຍັງມະນຸດຊາດທັງຫມົດ,
ເພາະວ່າແຜ່ນດິນໂລກເຕັມໄປດ້ວຍຄວາມໂຫດຮ້າຍຮຸນແຮງ, ຊົ່ວຊ້າຜ່ານພວກເຂົາ.
ແທ້ຈິງແລ້ວເຮົາຈະທໍາລາຍພວກເຂົາພ້ອມກັບພື້ນແຜ່ນດິນ.[14]ຈົ່ງສ້າງເຮືອເພື່ອຕົວເຈົ້າເອງຈາກໄມ້ສົນ. ຈົ່ງສ້າງຫ້ອງຕ່າງໆພາຍໃນເຮືອ, ແລະ
ເອົາຂີ້ຊີອັດຢາທາງໃນກັບທາງນອກໃຫ້ດີ.[15]ຕໍ່ໄປນີ້ຄືວິທີທີ່ເຈົ້າຈະສ້າງເຮືອ: ຄວາມຍາວຂອງເຮືອໃຫ້ໄດ້ 133ແມັດ, ຄວາມກວ້າງຂອງເຮືອ
22ແມັດ, ແລະ ທາງສູງ 13 ແມັດ.
[16]ຈົ່ງເຮັດຫລັງຄາສໍາລັບເຮືອ, ຈົ່ງເຮັດປ່ອງຢ້ຽມຈຸຫລັງຄາສູງເຄິ່ງແມັດ ແລະ ຈົ່ງເຮັດປະຕູເທິງດ້ານນັ້ນຂອງເຮືອ. ແລະ ເຮັດຝາເປັນສາມຊັ້ນ
ຄືຊັ້ນທີຫນຶ່ງ, ຊັ້ນທີສອງ, ແລະ ຊັ້ນທີສາມ.[17]ຈົ່ງຟັງ, ເຮົາຈະເຮັດໃຫ້ມີນ້ໍາຖ້ວມເທິງແຜ່ນດິນໂລກ,
ເພື່ອທໍາລາຍທຸກສິ່ງທີ່ມີຊີວິດຈາກພາຍໃຕ້ທ້ອງຟ້າ. ທຸກສິ່ງທີ່ຊຶ່ງຢູ່ເທິງແຜ່ນດິນໂລກຈະດັບສູນໄປ.
[18]ແຕ່ເຮົາຈະຕັ້ງພັນທະສັນຍາຂອງເຮົາໄວ້ກັບເຈົ້າ. ເຈົ້າຈົ່ງເຂົ້າມາໃນເຮືອນັ້ນ, ເຈົ້າ ແລະ ບັນດາລູກຊາຍຂອງເຈົ້າ, ແລະ ເມຍຂອງເຈົ້າ, ແລະ
ບັນດາພວກລູກໃພ້ທັງຫລາຍຂອງເຈົ້າ.[19]ເຈົ້າຈົ່ງນໍາເອົາສິ່ງທີ່ມີຊີວິດເນື້ອຫນັງທັງຫມົດ, ທຸກຊະນິດຢ່າງລະສອງໂຕທັງໂຕຜູ້ ແລະໂຕແມ່ເຂົ້າມາ
ໃນເຮືອ, ເພື່ອໃຫ້ພວກມັນມີຊີວິດຢູ່ກັບເຈົ້າ.
[20]ນົກທັງຫລາຍຕາມຊະນິດຂອງມັນ, ແລະ ສັດໂຕໃຫຍ່ຕາມຊະນິດຂອງພວກມັນ, ສິ່ງທີ່ເລືອຍຄານແຫ່ງແຜ່ນດິນຕາມຊະນິດຂອງມັນ,
ສັດທຸກຊະນິດຈະມາຫາເຈົ້າເປັນຄູ່ໆ, ເພື່ອພວກມັນຈະມີຊີວິດຢູ່.[21]ຈົ່ງຈັດຕຽມເອົາອາຫານທຸກຊະນິດເພື່ອທີ່ຈະກິນ ແລະ ເກັບເອົາໄວ້,
ສໍາລັບຄອບຄົວຂອງເຈົ້າ, ດັ່ງນັ້ນມັນຈະເປັນອາຫານສໍາລັບເຈົ້າ ແລະ ສັດເຫລົ່ານັ້ນ."[22]ດັ່ງນັ້ນໂນອາ ຈຶ່ງໄດ້ເຮັດສິ່ງນີ້.
ຕາມທີ່ພຣະເຈົ້າໄດ້ຊົງສັ່ງລາວທຸກຢ່າງ, ແລະ ລາວກໍໄດ້ເຮັດຕາມ.

7 [1]ພຣະຢາເວໄດ້ບອກໂນອາວ່າ, "ມາ, ເຈົ້າ ແລະ ທຸກຄົນໃນຄົວເຮືອນຂອງເຈົ້າ, ຈົ່ງເຂົ້າໄປໃນເຮືອ,

ເພາະວ່າໃນຄົນຮຸ່ນນີ້ເຮົາໄດ້ເຫັນແລ້ວວ່າເຈົ້າຜູ້ດຽວເທົ່ານັ້ນທີ່ເປັນຄົນຊອບທັມຕໍ່ຫນ້າເຮົາ.[2]ເຈົ້າຈົ່ງນໍາສັດທີ່ບໍ່ເປັນມົນທິນທຸກຊະນິດໂຕຜູ້ເຈັດໂຕ
ແລະ ໂຕແມ່ເຈັດໂຕ. ແຕ່ສັດທີ່ເປັນມົນທິນທຸກຊະນິດ, ຢ່າງລະສອງໂຕຄືໂຕຜູ້ຫນຶ່ງໂຕ ແລະ ຄູ່ຂອງມັນ.[3]ນົກທັງຫລາຍຂອງທ້ອງຟ້າ,
ໃຫ້ນໍາມາໂຕຜູ້ເຈັດໂຕ ແລະ ໂຕແມ່ເຈັດໂຕ, ເພື່ອຮັກສາພັນໄວ້ເທິງແຜ່ນດິນທັງຫມົດ.

[4]ເພາະວ່າໃນອີກເຈັດວັນເຮົາຈະເຮັດໃຫ້ຝົນຕົກລົງມາເທິງແຜ່ນດິນເປັນເວລາສີ່ສິບວັນສີ່ສິບຄືນ.
ເຮົາຈະທໍາລາຍສິ່ງທີ່ມີຊີວິດທຸກຢ່າງທີ່ເຮົາໄດ້ສ້າງຈາກພື້ນແຜ່ນດິນ."[5]ຝ່າຍໂນອາກໍໄດ້ເຮັດຕາມທຸກສິ່ງທີ່ພຣະຢາເວຊົງໄດ້ສັ່ງເຂົາໄວ້.
[6]ໂນອາມີອາຍຸໄດ້ 600 ປີ ເມື່ອນໍ້າຖ້ວມແຜ່ນດິນ.[7]ໂນອາ, ພ້ອມດ້ວຍລູກຊາຍທັງຫລາຍຂອງເຂົາ, ແລະ ເມຍຂອງເຂົາ, ແລະ
ພ້ອມລູກໃພ້ທັງຫລາຍ ກໍພາກັນເຂົ້າໄປໃນເຮືອດ້ວຍກັນເພາະນໍ້າຖ້ວມນັ້ນ.
[8]ສັດທັງຫລາຍທັງທີ່ເປັນມົນທິນ ແລະ ບໍ່ເປັນມົນທິນ, ນົກທັງຫລາຍ, ແລະ ສັດທຸກຊະນິດທີ່ເລືອຍຄານເທິງພື້ນດິນ.[9]ເປັນຄູ່ໆໂຕຜູ້ ແລະໂຕແມ່,
ໄດ້ມາຫາໂນອາ ແລະ ເຂົ້າໄປໃນເຮືອ, ດັ່ງທີ່ພຣະເຈົ້າໄດ້ສັ່ງໂນອາ.[10]ກໍເປັນຢ່າງນັ້ນຫລັງຈາກເຈັດວັນຜ່ານໄປ, ນໍ້າກໍໄດ້ຖ້ວມພື້ນແຜ່ນດິນໂລກ.
[11]ໂນອາອາຍຸໄດ້ 600 ປີ, ໃນເດືອນທີສອງ, ໃນວັນທີສິບເຈັດຂອງເດືອນ, ໃນວັນນັ້ນເອງ,
ນໍ້າພຸທັງຫລາຍຂອງບ່ອນເລິກຫລາຍໄດ້ພຸ່ງຂຶ້ນມາຢ່າງແຮງ ແລະ ປ່ອງຢ້ຽມທັງຫລາຍຂອງທ້ອງຟ້າກໍໄດ້ຖືກເປີດອອກ.[12]ຝົນໄດ້ເລີ່ມຕົກ ແລະ
ຕົກລົງເທິງພື້ນແຜ່ນດິນໂລກເປັນເວລາສີ່ສິບວັນສີ່ສິບຄືນ.
[13]ໃນວັນດຽວກັນນັ້ນ ໂນອາ ແລະ ລູກຊາຍທັງສາມຄົນຂອງເຂົາ: ເຊມ, ຮາມ ແລະ ຢາເຟດ, ແລະ ເມຍຂອງໂນອາ, ແລະ
ເມຍທັງສາມຄົນຂອງລູກຊາຍຂອງເຂົາກັບພວກເຂົາທັງຫມົດໄດ້ເຂົ້າໄປໃນເຮືອນັ້ນ.[14]ພວກເຂົາໄດ້ເຂົ້າໄປພ້ອມກັບສັດປ່າຕາມຊະນິດຂອງມັນ,
ແລະ ສັດບ້ານສັດໃຫຍ່ຕາມຊະນິດຂອງມັນ, ແລະ ບັນດາສິ່ງທີ່ເລືອຍຄານເທິງພື້ນດິນຕາມຊະນິດຂອງມັນ,
ນົກພ້ອມສັດທີ່ມີປີກຕາມຊະນິດຂອງມັນ.
[15]ສັດທັງຫລາຍທີ່ມີລົມປານແຫ່ງຊີວິດໄດ້ມາຫາໂນອາ ແລະ ເຂົ້າໄປຢູ່ໃນເຮືອເປັນຄູ່ໆ.[16]ສັດທຸກຊະນິດທັງຫມົດທີ່ເຂົ້າໄປເປັນໂຕຜູ້ ແລະ ໂຕແມ່;
ພວກມັນເຂົ້າມາຕາມທີ່ພຣະເຈົ້າໄດ້ສັ່ງແກ່ເຂົາແລ້ວ. ຈາກພຣະຢາເວກໍໄດ້ອັດປະຕູເຮືອຫລັງຈາກທີ່ພວກເຂົາເຂົ້າໄປ.
[17]ຈາກນັ້ນນໍ້າໄດ້ຖ້ວມແຜ່ນດິນເປັນເວລາສີ່ສິບວັນສີ່ສິບຄືນ, ແລະ ນໍ້າໄດ້ເພີ່ມຂຶ້ນເລື້ອຍໆ ແລະ ຍົກເຮືອຂອງໂນອາຟູຢູ່ເຫນືອແຜ່ນດິນ.
[18]ນໍ້າໄດ້ຖ້ວມເຫນືອແຜ່ນດິນທັງຫມົດ, ແລະ ເຮືອຂອງໂນອາໄດ້ລອຍຢູ່ເທິງຫນ້ານໍ້າ.
[19]ນໍ້າໄດ້ເພີ່ມຂຶ້ນເລື້ອຍໆດັ່ງນັ້ນພູເຂົາສູງທັງຫມົດຊຶ່ງຢູ່ໃຕ້ທ້ອງຟ້າກວ້າງຖືກນໍ້າຖ້ວມຫມົດ.[20]ນໍ້າໄດ້ເພີ່ມຂຶ້ນສູງອີກເຈັດແມັດ
ຖ້ວມເຫນືອຍອດພູເຂົາທັງຫລາຍ.
[21]ສິ່ງທີ່ມີຊີວິດທຸກສິ່ງທີ່ເຄື່ອນໄຫວເທິງພື້ນແຜ່ນດິນຕາຍທັງຫມົດຄື: ນົກທຸກຊະນິດ, ສັດທຸກຊະນິດທີ່ໃຊ້ງານ, ສັດປ່າທັງຫລາຍ,
ທຸກສິ່ງທີ່ມີຊີວິດຈໍານວນຫລາຍທີ່ອາໄສຢູ່ເທິງແຜ່ນດິນ, ແລະ ມະນຸດທັງຫມົດ.
[22]ທຸກສິ່ງທີ່ມີຊີວິດເທິງແຜ່ນດິນທີ່ຫາຍໃຈເອົາລົມປານແຫ່ງຊີວິດຜ່ານດັງຂອງພວກເຂົາໄດ້ຕາຍໄປ.
[23]ດັ່ງນັ້ນທຸກສິ່ງທີ່ມີຊີວິດຢູ່ເທິງພື້ນຜິວຂອງແຜ່ນດິນຖືກກວາດລ້າງອອກໄປ, ນັບຕັ້ງແຕ່ມະນຸດໄປຈົນເຖິງສັດທີ່ມີຂະຫນາດໃຫຍ່ກວ່າ,
ສິ່ງທີ່ເລືອຍຄານ, ແລະ ນົກທັງຫລາຍຂອງທ້ອງຟ້າ. ພວກເຂົາທັງຫລາຍໄດ້ຖືກທໍາລາຍໄປຈາກແຜ່ນດິນ. ເຫລືອພຽງແຕ່ຄອບຄົວຂອງໂນອາ
ແລະ ສັດທີ່ຢູ່ກັບເຂົາໃນເຮືອເທົ່ານັ້ນ.[24]ນໍ້າບໍ່ໄດ້ລົດລົງຈາກແຜ່ນດິນເປັນເວລາ 150 ວັນ.

8 1ພຣະເຈົ້າບໍ່ໄດ້ລືມໂນອາ, ພ້ອມທັງສັດປ່າທັງຫມົດ, ແລະ ສັດລ້ຽງທັງຫລາຍທີ່ຢູ່ກັບເຂົາໃນເຮືອນັ້ນ.
ພຣະເຈົ້າໄດ້ເຮັດໃຫ້ມີລົມພັດມາເຫນືອແຜ່ນດິນ, ແລະ ນ້ຳກໍເລີ່ມບົກລົງ. 2ນ້ຳພຸນ້ຳໃຕ້ພື້ນດິນເລິກ ແລະ
ປ່ອງນ້ຳທັງຫລາຍຂອງທ້ອງຟ້າກໍຖືກອັດຫມົດ, ແລະ ຝົນກໍເຊົາຕົກ. 3ແລະ ນ້ຳກໍຄ່ອຍໆບົກລົງຈາກພື້ນດິນ, ແລະ
ຫລັງຈາກຫນຶ່ງຮ້ອຍຫ້າສິບວັນຜ່ານໄປນ້ຳໄດ້ລົດລົງ.

4ເຮືອຂອງໂນອາໄດ້ຕິດຄ້າງຄາຢູ່ທີ່ເທິງຍອດເຂົາອາຣາຣັດ. ໃນເດືອນທີເຈັດໃນວັນທີສິບເຈັດຂອງເດືອນນັ້ນ.
5ນ້ຳໄດ້ບົກລົງເລື້ອຍໆຈົນຮອດເດືອນທີສິບ. ໃນວັນທີຫນຶ່ງຂອງເດືອນນັ້ນແລ້ວຈອມພູເຂົາຕ່າງໆກໍໄດ້ປາກົດຂຶ້ນ.
6ເລື່ອງນີ້ໄດ້ເກີດຂຶ້ນຫລັງຈາກສີ່ສິບວັນທີ່ໂນອາໄດ້ໄຂປ່ອງຢ້ຽມຂອງເຮືອຊຶ່ງເຂົາໄດ້ເຮັດໄວ້. 7ເຂົາໄດ້ປ່ອຍກາໂຕຫນຶ່ງອອກໄປ ແລະ
ມັນໄດ້ບິນກັບໄປກັບມາຈົນນ້ຳໄດ້ແຫ້ງລົງຈາກແຜ່ນດິນ.
8ຈາກນັ້ນເຂົາໄດ້ສົ່ງນົກເຂົາໂຕຫນຶ່ງອອກໄປເພື່ອຈະເບິ່ງວ່ານ້ຳໄດ້ບົກລົງຈາກພື້ນຂອງແຜ່ນດິນຫລືຍັງ, 9ແຕ່ນົກເຂົາບໍ່ມີບ່ອນຈັບ, ແລະ
ມັນໄດ້ກັບມາຫາເຂົາທີ່ເຮືອເພາະນ້ຳຍັງຖ້ວມພື້ນແຜ່ນດິນທັງຫມົດຢູ່. ລາວໄດ້ຍື່ນມືຂອງລາວອອກໄປຈັບເອົານົກໂຕນັ້ນມາໄວ້ໃນເຮືອນຳຫມູ່.
10ເຈັດວັນຕໍ່ມາ ແລະ ເພິ່ນໄດ້ປ່ອຍນົກເຂົາອອກໄປຈາກເຮືອອີກຄັ້ງຫນຶ່ງ. 11ນົກເຂົາໄດ້ບິນກັບມາຫາລາວໃນຕອນແລງ. ເບິ່ງແມ!
ໃນປາກຂອງມັນມີໃບຫມາກກອກຂຽວສົດດ້ວຍ. ດັ່ງນັ້ນໂນອາຈຶ່ງຮູ້ໄດ້ວ່ານ້ຳໄດ້ບົກລົງຈາກແຜ່ນດິນແລ້ວ. 12ລາວໄດ້ຖ້າອີກເຈັດວັນຕໍ່ມາ, ແລະ
ໄດ້ປ່ອຍນົກເຂົານັ້ນອອກໄປອີກ, ແລະ ມັນບໍ່ໄດ້ກັບຄືນມາຫາລາວອີກ.
13ຕໍ່ມາໃນປີທີ 601ປີ, ໃນເດືອນທີຫນຶ່ງ ໃນວັນທີຫນຶ່ງ, ຂອງປີນັ້ນທີ່ນ້ຳໄດ້ບົກແຫ້ງໄປຈາກພື້ນດິນ.
ໂນອາໄດ້ເປີດຫລັງຄາເຮືອອອກເບິ່ງອອກໄປຂ້າງນອກຈຶ່ງເຫັນວ່າຫນ້າດິນແຫ້ງແລ້ວ. 14ໃນເດືອນທີສອງ,
ໃນວັນທີຊາວເຈັດຂອງເດືອນນັ້ນພື້ນແຜ່ນດິນກໍໄດ້ແຫ້ງຫມົດ.
15ພຣະເຈົ້າກໍກ່າວແກ່ໂນອາວ່າ, 16"ຈົ່ງອອກໄປຈາກເຮືອ, ເຈົ້າ, ແລະ ເມຍຂອງເຈົ້າພ້ອມດ້ວຍພວກລູກຊາຍ, ກັບພວກລູກໃພ້ຂອງເຈົ້າ.
17ຈົ່ງນຳທຸກສິ່ງທີ່ມີຊີວິດຂອງເນື້ອຫນັງທັງຫມົດທີ່ຢູ່ກັບເຈົ້າອອກໄປກັບເຈົ້າຄື- ນົກທັງຫລາຍ, ສັດຕ່າງໆ, ແລະ ສັດເລືອຍຄານທຸກຊະນິດ,
ທີ່ເລືອຍຄານເທິງແຜ່ນດິນ - ດັ່ງນັ້ນພວກມັນທັງຫລາຍຈະເຕີບໂຕເພີ່ມຈຳນວນຂຶ້ນຂອງສິ່ງທີ່ມີຊີວິດຢ່າງຫລວງຫລາຍທົ່ວພື້ນແຜ່ນດິນ, ແຜ່ພັນ,
ແລະ ເພີ່ມຈຳນວນເທິງແຜ່ນດິນໂລກ."
18ດັ່ງນັ້ນໂນອາໄດ້ອອກໄປກັບບັນດາລູກຊາຍຂອງລາວ, ເມຍຂອງລາວ, ແລະ ພວກລູກໃພ້ຂອງລາວອອກໄປພ້ອມກັບລາວ. 19ທຸກສິ່ງທີ່ມີຊີວິດ,
ທຸກສິ່ງທີ່ເລືອຍຄານ, ແລະ ນົກທຸກຊະນິດ, ທຸກສິ່ງທີ່ເຄື່ອນໄຫວເທິງແຜ່ນດິນຕາມພັນຂອງພວກມັນໄດ້ອອກຈາກເຮືອ.
20ໂນອາກໍໄດ້ສ້າງແທ່ນບູຊາແກ່ພຣະຢາເວ. ລາວໄດ້ເອົາສັດ ແລະ ນົກບາງໂຕທີ່ບໍ່ເປັນມົນທິນ, ແລະ ເຜົາບູຊາເທິງແທ່ນບູຊານັ້ນ.
21ພຣະຢາເວຊົງໄດ້ຮັບກິ່ນທີ່ພໍໃຈ, ແລະ ພຣະຢາເວກໍຊົງກ່າວວ່າ,
"ເຮົາຈະບໍ່ສາບແຊ່ງແຜ່ນດິນອີກຈັກເທື່ອເຖິງແມ່ນວ່າມະນຸດມີຈິດໃຈໃຝ່ຫາໄປໃນທາງທີ່ຊົ່ວຮ້າຍ, ມາຕັ້ງແຕ່ຍັງນ້ອຍ. ຫລື
ຈະບໍ່ທຳລາຍທຸກສິ່ງທີ່ມີຊີວິດ ເຫມືອນດັ່ງທີ່ເຮົາໄດ້ເຄີຍເຮັດອີກຈັກເທື່ອ. 22ຕາບໃດທີ່ພື້ນແຜ່ນດິນຍັງຄົງດຳລົງຢູ່ລະດູຫວ່ານກັບລະດູເກັບກ່ຽວ,
ຈະມີຫນາວມີຮ້ອນຮ່ວມກັນຢູ່ສະເຫມີ ລະດູຮ້ອນ, ແລະ ລະດູຫນາວ, ກາງເວັນ ແລະ ກາງຄືນຈະຍັງຄົງມີເລື້ອຍໄປຕາມນັ້ນ."


generated on Tue Jun 17 19:01:42 2025

9 1ພຣະເຈົ້າໄດ້ອວຍພອນແກ່ໂນອາ ແລະ ລູກຊາຍທັງຫລາຍຂອງລາວ, ແລະ ໄດ້ກ່າວກັບພວກເຂົາວ່າ, "ຈົ່ງມີລູກຫລານໃຫ້ມາກຫລາຍ,
ທະວີຂຶ້ນທົ່ວເທິງແຜ່ນດິນໂລກ. 2ຄວາມຢ້ານກົວເຈົ້າ, ແລະ ຄວາມເກງກົວແກ່ເຈົ້າ ຈະມີເຫນືອສັດທຸກຕົວທີ່ມີຊີວິດເທິງພື້ນແຜ່ນດິນ,
ເຫນືອນົກທຸກໂຕຂອງທ້ອງຟ້າ, ເຫນືອທຸກສິ່ງທີ່ເລືອຍຄານເທິງພື້ນດິນ, ແລະ ເຫນືອປາທຸກຊະນິດແຫ່ງທ້ອງທະເລ.
ພວກມັນທັງຫມົດໄດ້ຖືກມອບໄວ້ໃນມືເຈົ້າ.

3ສິ່ງທີ່ເຄື່ອນໄຫວທຸກສິ່ງທີ່ມີຊີວິດຢູ່ຈະເປັນອາຫານສຳລັບເຈົ້າ. ບັດນີ້ເຮົາໃຫ້ທຸກສິ່ງແກ່ພວກເຈົ້າ, ເຫມືອນທີ່ເຮົາໄດ້ໃຫ້ພືດສີຂຽວແກ່ເຈົ້າ.
4ແຕ່ເຈົ້າບໍ່ຕ້ອງກິນຊີ້ນທີ່ມີເລືອດ - ເພາະເລືອດແມ່ນຫລັກສຳຄັນແຫ່ງຊີວິດ.
5ແຕ່ສຳລັບເລືອດຂອງເຈົ້າ, ຊີວິດທີ່ຢູ່ໃນເລືອດຂອງເຈົ້າເຮົາຈະເອີ້ນຄ່າຕອບແທນຈາກມືຂອງສັດທຸກໂຕ.
ເຮົາຈະເອີ້ນຄ່າຕອບແທນຈາກມືຂອງມະນຸດໃດໆນັ້ນ, ຄືຈາກມືຂອງໃຜກໍຕາມຜູ້ຊຶ່ງຂ້າພີ່ນ້ອງຂອງເຂົາເຮົາຈະເອີ້ນຄືນເພາະຊີວິດຂອງຄົນໆນັ້ນ.
6ໃຜກໍຕາມທີ່ເຮັດໃຫ້ມະນຸດເລືອດໄຫລ, ເລືອດຂອງເຂົາກໍຈະໄຫລດ້ວຍມະນຸດດ້ວຍ,
ເພາະວ່າມັນຢູ່ໃນພຣະລັກສະນະຂອງພຣະເຈົ້າທີ່ພຣະອົງໄດ້ຊົງສ້າງມະນຸດ. 7ສຳລັບພວກເຈົ້າ, ຈົ່ງແຜ່ພັນ ແລະ ເພີ່ມຈຳນວນຂຶ້ນ,
ແຜ່ອອກໄປທົ່ວແຜ່ນດິນ ແລະ ທະວີຫລາຍຂຶ້ນເທິງແຜ່ນດິນໂລກ."
8ຈາກນັ້ນພຣະເຈົ້າໄດ້ເວົ້າກັບໂນອາ ແລະ ກັບລູກຊາຍທັງຫລາຍຂອງລາວທີ່ຢູ່ກັບລາວວ່າ, 9"ຈົ່ງຟັງສຳລັບເຮົາ!
ເຮົາຈະຢືນຢັນພັນທະສັນຍາຂອງເຮົາກັບເຈົ້າ ແລະ ເຊື້ອສາຍຂອງເຈົ້າຫລັງຈາກເຈົ້າ. 10ແລະ ທຸກສິ່ງທີ່ມີຊີວິດທີ່ຢູ່ກັບເຈົ້າ,
ກັບນົກທັງຫລາຍສັດລ້ຽງ, ແລະ ສັບພະທຸກສິ່ງແຫ່ງແຜ່ນດິນທີ່ຢູ່ກັບເຈົ້າ,
ຈາກທັງຫມົດທີ່ອອກມາຈາກເຮືອເຖິງສັບພະສິ່ງທີ່ມີຊີວິດເທິງແຜ່ນດິນ.
11ເຮົາຢືນຢັນພັນທະສັນຍາຂອງເຮົາທີ່ມີກັບເຈົ້າ, ຄືເນື້ອຫນັງທັງຫມົດຈະບໍ່ຖືກທຳລາຍດ້ວຍນ້ຳຖ້ວມອີກ.
ຈະບໍ່ມີນ້ຳຖ້ວມທຳລາຍແຜ່ນດິນໂລກອີກ." 12ພຣະເຈົ້າຊົງກ່າວວ່າ,
"ນີ້ແມ່ນເຄື່ອງຫມາຍແຫ່ງພັນທະສັນຍາຊຶ່ງເຮົາໄດ້ເຮັດຂຶ້ນລະຫວ່າງເຮົາກັບເຈົ້າ ແລະ ທຸກໆສິ່ງທີ່ມີຊີວິດທີ່ຢູ່ກັບເຈົ້າ, ສຳລັບຄົນທຸກຊົ່ວອາຍຸ:
13ເຮົາໄດ້ຕັ້ງຮຸ້ງກິນນ້ຳໄວ້ໃນເມກ, ແລະນີ້ຈະເປັນເຄື່ອງຫມາຍແຫ່ງພັນທະສັນຍາລະຫວ່າງເຮົາ ແລະ ແຜ່ນດິນໂລກ.
14ຈະເປັນຢ່າງນັ້ນເມື່ອເຮົາໃຫ້ມີເມກເຫນືອແຜ່ນດິນ ແລະ ເຫັນຮຸ້ງກິນນ້ຳໃນເມກນັ້ນ, 15ເຮົາກໍຈະນຶກເຖິງພັນທະສັນຍາຂອງເຮົາ,
ທີ່ໄດ້ເຮັດລະຫວ່າງເຮົາກັບເຈົ້າ ແລະ ທຸກສິ່ງທີ່ມີຊີວິດແຫ່ງເນື້ອຫນັງ. ນ້ຳຈະບໍ່ຖ້ວມທຳລາຍເນື້ອຫນັງທັງຫມົດອີກຕໍ່ໄປ.
16ຮຸ້ງກິນນ້ຳຈະປາກົດຂຶ້ນໃນເມກ ແລະ ເຮົາຈະເຫັນ, ເພື່ອທີ່ຈະລະນຶກເຖິງພັນທະສັນຍານິຣັນດອນລະຫວ່າງພຣະເຈົ້າ ແລະ ທຸກສິ່ງທີ່ມີ
ຊີວິດຂອງເນື້ອຫນັງທັງຫມົດຊຶ່ງຢູ່ເທິງແຜ່ນດິນໂລກ." 17ຈາກນັ້ນພຣະເຈົ້າຊົງກ່າວກັບໂນອາວ່າ,
"ອັນນີ້ຄືເຄື່ອງຫມາຍຂອງພັນທະສັນຍາຊຶ່ງເຮົາໄດ້ຢືນຢັນໄວ້ແລ້ວລະຫວ່າງເຮົາກັບສິ່ງທີ່ມີຊີວິດທັງຫມົດທີ່ຢູ່ເທິງແຜ່ນດິນ."
18ລູກຊາຍຂອງໂນອາທີ່ອອກມາຈາກເຮືອຄື: ເຊມ, ຮາມ ແລະ ຢາເຟດ. ຮາມເປັນພໍ່ຂອງການາອານ. 19ທັງສາມຄົນນີ້ເປັນລູກຂອງໂນອາ, ແລະ
ດ້ວຍພວກເຂົາເຫລົ່ານີ້ເຮັດໃຫ້ພື້ນແຜ່ນດິນທັງຫມົດເຕັມໄປດ້ວຍປະຊາຊາດ.
20ໂນອາໄດ້ເລີ່ມເປັນຊາວສວນ, ແລະ ລາວເປັນຄົນທຳອິດທີ່ປູກຕົ້ນອະງຸ່ນ. 21ລາວໄດ້ດື່ມນ້ຳອະງຸ່ນຫລາຍ ແລະ ເມົາ.
ລາວໄດ້ນອນເປືອຍກາຍຢູ່ໃນຜ້າເຕັນຂອງລາວ.
22ຈາກນັ້ນຮາມ, ພໍ່ຂອງການາອານ, ໄດ້ມາເຫັນການເປືອຍກາຍຂອງພໍ່ລາວຈຶ່ງຟ້າວໄປບອກພີ່ນ້ອງຂອງເຂົາທີ່ຢູ່ຂ້າງນອກ. 23ດັ່ງນັ້ນເຊມ ແລະ
ຢາເຟດຈຶ່ງໄດ້ເອົາເສື້ອຄຸມຍາວ ແລະ ພາດໃສ່ບ່າຂອງພວກເຂົາທັງສອງ.
ພວກເຂົາຍ່າງຖອຍຫລັງເຂົ້າໄປແລ້ວປົກປິດການເປືອຍກາຍຂອງພໍ່ຂອງພວກເຂົາ. ພວກເຂົາໄດ້ປິ່ນຫນ້າໄປທາງອື່ນ,
ດັ່ງນັ້ນພວກເຂົາຈຶ່ງບໍ່ໄດ້ເຫັນການເປືອຍກາຍຂອງພໍ່ພວກເຂົາ.
24ເມື່ອໂນອາໄດ້ຕື່ນຂຶ້ນຈາກການເມົາຂອງລາວ, ລາວກໍຮູ້ເຖິງສິ່ງທີ່ລູກຊາຍຫລ້າໄດ້ເຮັດກັບຕົນ 25ດັ່ງນັ້ນເຂົາຈຶ່ງຮ້ອງຂຶ້ນວ່າ,
"ການາອານຈົ່ງຖືກສາບແຊ່ງ. ໃຫ້ມັນເປັນຄົນຮັບໃຊ້ຂອງຄົນຮັບໃຊ້ທັງຫລາຍຂອງພວກອ້າຍຂອງມັນ."
26ເຂົາຍັງເວົ້າດ້ວຍອີກວ່າ, "ຂໍໃຫ້ພຣະຢາເວ, ພຣະເຈົ້າຂອງເຊມ, ໄດ້ຮັບການສັນຣະເສີນ, ແລະ ໃຫ້ການາອານເປັນຄົນຮັບໃຊ້ຂອງເຂົາ.
27ຂໍໃຫ້ພຣະເຈົ້າເພີ່ມອານາເຂດຂອງຢາເຟດ, ແລະ ໃຫ້ເຂົາສ້າງບ້ານໃນເຕັນທັງຫລາຍຂອງເຊມ.
ໃຫ້ການາອານຈະເປັນທາດຮັບໃຊ້ຂອງເຂົາ."
28ຫລັງຈາກນ້ຳຖ້ວມ, ໂນອາກໍມີອາຍຸຕໍ່ມາອີກສາມຮ້ອຍຫ້າສິບປີ. 29ລວມໂນອາມີອາຍຸເພີ່ນໄດ້ເກົ້າຮ້ອຍຫ້າສິບປີ, ແລະ ຈາກນັ້ນລາວກໍຕາຍໄປ.

10 1ເຫລົ່ານີ້ຄືເຊື້ອສາຍຂອງພວກລູກຊາຍທັງຫລາຍຂອງໂນອາ, ຄື: ເຊມ, ຮາມ ແລະ ຢາເຟດ. ພວກເຂົາໄດ້ໃຫ້ກຳເນີດລູກຊາຍທັງຫລາຍ
ຫລັງຈາກນ້ຳໄດ້ຖ້ວມ.

2ລູກຊາຍທັງຫລາຍຂອງຢາເຟດຄື: ໂກເມ, ມາໂກກ, ມາດາຍ, ຢາວານ, ຕູບານ, ເມເຊັກ ແລະ ຕີຣາດ.3ລູກຊາຍທັງຫລາຍຂອງໂກເມຄື:
ອັດຊະເກນາດ, ຣີຟາດ, ແລະ ໂຕກາມາ.4ລູກຊາຍທັງຫລາຍຂອງຢາວານຄືເອລີຊາ, ສະເປນ, ໄຊປຣັດ, ແລະ ໂຣເດັດ.5ຈາກຄົນເຫລົ່ານີ້
ປະຊາຊົນຕາມຊາຍຝັ່ງໄດ້ແຍກ ແລະ ເຂົ້າໄປໃນແຜ່ນດິນຂອງພວກເຂົາ, ແຕ່ລະຄົນຕາມພາສາຂອງຕົນ,
ຕາມຕະກູນໂດຍປະຊາຊາດທັງຫລາຍຂອງພວກເຂົາ.
6ລູກຊາຍທັງຫລາຍຂອງຮາມຄື: ກູເຊ, ມີຊຣາຢິມ, ປັດ, ແລະ ການາອາ.7ລູກຊາຍທັງຫລາຍຂອງກູເຊຄື: ເຊບາ, ຮາວີລາ, ສັບຕາ, ຣາອາມາ,
ແລະ ສັບເຕກາ. ລູກຊາຍທັງຫລາຍຂອງຣາອາມາຄື: ເຊບາ ແລະ ເດດານ.
8ກູເຊເປັນພໍ່ຂອງນິມໂຣດ, ຊຶ່ງເປັນຜູ້ມີອຳນາດຄົນທຳອິດຂອງແຜ່ນດິນ.9ເຂົາເປັນນາຍພານທີ່ຊົງພະລັງຕໍ່ພຣະພັກພຣະຢາເວ.
ນັ້ນຄືສິ່ງທີ່ເປັນມາຂອງຄຳເວົ້າທີ່ວ່າ, "ເຫມືອນນິມໂຣດ, ນາຍພານທີ່ຊົງພະລັງ
ຕໍ່ພຣະພັກພຣະຢາເວ."10ສູນກາງຂອງອຳນາດແຫ່ງທຳອິດຂອງເຂົາຄືເມືອງບາບີໂລນ, ເມືອງເອເຣັກ, ເມືອງອັກກາດ, ແລະ
ເມືອງຄານເນໃນແຜ່ນດິນຊີນາ.
11ນອກຈາກດິນແດນນີ້ເພິ່ນໄດ້ໄປຍັງອັດຊີເຣຍ ແລະ ສ້າງເມືອງຕ່າງໆຂຶ້ນ: ເມືອງນີເນເວ, ເມືອງເຣໂຮໂບດອີເຣ, ເມືອງກາລາ.
12ແລະເມືອງເຣເສັນ, ຊຶ່ງຢູ່ລະຫວ່າງເມືອງນີເນເວ ແລະ ເມືອງກາລາ. ມັນເປັນເມືອງໃຫຍ່.13ເອຢິບໄດ້ໃຫ້ກຳເນີດຄົນລີເດຍ, ຄົນອານາມ,
ຄົນເລຮາບ, ຄົນນັບຕູ,14ຄົນປາທະຣູ, ຄົນກັດສະລູ (ຕົ້ນຕະກູນຄົນຟີລິດສະຕິນ), ແລະ ຄົນກະເຣເຕ.
15ການາອານເປັນພໍ່ຂອງຊີໂດນ, ຊຶ່ງເປັນລູກກົກຂອງເຂົາ, ແລະ ເຫັດ,16ແລະ ຄົນເຢບຸດ, ຄົນອາໂມ, ຄົນກີກາຊີ,17ຄົນຮີວີ, ຄົນອາກກີ, ຄົນສີນີ,
18ຄົນອາກວາດີ, ຄົນເຊມາຣີ ແລະ ຄົນຮາມັດ. ພາຍຫລັງຕະກູນຂອງຄົນການາອານກໍແຜ່ຂະຫຍາຍອອກໄປ.
19ເຂດແດນຂອງຄົນການາອານເລີ່ມຈາກເມືອງຊີໂດນ, ໄປເຖິງເມືອງເກຣາກ, ໄກໄປຈົນເຖິງເມືອງກາຊາ, ແລະ ໄປຈົນເຖິງເມືອງໂຊໂດມ,
ເມືອງໂກໂມຣາ, ເມືອງອັດມາ, ແລະ ເມືອງເຊບົວອີມ, ໄປໄກຈົນເຖິງເມືອງລາຊາ.20ຄົນເຫລົ່ານີ້ຄືລູກຊາຍທັງຫລາຍຂອງຮາມ,
ໂດຍຕະກູນຂອງພວກເຂົາ, ໂດຍພາສາຂອງພວກເຂົາ, ໃນແຜ່ນດິນຂອງພວກເຂົາ, ແລະ ໃນປະຊາຊາດທັງຫລາຍຂອງພວກເຂົາ.
21ລູກຊາຍທັງຫລາຍຂອງເຊມ, ຜູ້ທີ່ເປັນອ້າຍກົກຂອງຢາເຟດ. ເຊມຍັງເປັນບັນພະບູຣຸດຂອງຄົນທັງຫມົດຂອງເອເບ.
22ລູກຊາຍທັງຫລາຍຂອງເຊມລວມມີ ເອລາມ, ອັດຊູຣະ, ອາກປັກຊາດ, ລູດ, ແລະອາຣາມ.23ເຊື້ອສາຍຂອງອາຣາມແມ່ນຊາວອູເຊ, ຮຸນ, ເກເທ
ແລະເມເຊັກ.
24ອາກປັກຊາດນັ້ນເປັນພໍ່ຂອງເຊລາ, ແລະ ເຊລາເປັນພໍ່ຂອງເອເບ.25ເອເບມີລູກຊາຍສອງຄົນ. ຄົນຫນຶ່ງຊື່ເປເລັກ,
ເພາະໃນສະໄຫມຂອງເພິ່ນໄດ້ມີການແບ່ງແຍກແຜ່ນດິນກັນ. ນ້ອງຊາຍຂອງລາວຊື່ໂຢກທານ.
26ໂຢກທານເປັນພໍ່ຂອງອານໂມດາດ, ເຊເລັບ, ຮາຊາມາເວດ, ເຢຣາ,27ຮາໂດຣາມ, ອູຊານ, ດີກະລາ,28ໂອບານ, ອາບີມາເອນ, ເຊບາ,29ໂອຟີ,
ຮາວີລາ ແລະ ໂຢບັບ. ພວກເຂົາທັງຫມົດແມ່ນເຊື້ອສາຍຂອງໂຢກທານ.
30ດິນແດນຂອງພວກເຂົາເລີ່ມຈາກເມືອງເມຊາ, ໄປທາງເມືອງເສຟາ, ພູເຂົາທາງທິດຕາເວັນອອກ.31ຄົນເຫລົ່ານີ້ແມ່ນເຊື້ອສາຍຂອງເຊມ,
ຕາມຕະກູນຂອງພວກເຂົາ ແລະ ພາສາຕ່າງໆຂອງພວກເຂົາ, ໃນແຜ່ນດິນຂອງເຂົາທັງຫລາຍ, ຕາມປະຊາຊາດທັງຫລາຍຂອງພວກເຂົາ.
32ຄົນເຫລົ່ານີ້ຄືຕະກູນຂອງລູກຊາຍທັງຫລາຍໂນອາ, ຕາມພົງພັນຂອງພວກເຂົາໂດຍປະຊາຊາດທັງຫລາຍຂອງພວກເຂົາ.
ຈາກພວກເຫລົ່ານີ້ປະຊາຊາດທັງຫລາຍໄດ້ແບ່ງແຍກ ແລະ ໄປທົ່ວແຜ່ນດິນຫລັງນ້ຳຖ້ວມ.

11 [1]ເມື່ອນັ້ນຄົນທົ່ວທັງແຜ່ນດິນໂລກໃຊ້ພາສາ ແລະ ຄຳສັບດຽວກັນ ແລະ ໃຊ້ຖ້ອຍຄຳແບບດຽວກັນ.
[2]ໃນຂະນະທີ່ພວກເຂົາໄດເດີນທາງໄປທາງທິດຕາເວັນອອກ, ພວກເຂົາໄດ້ພົບທົ່ງຮາບພຽງໃນແຜ່ນດິນຊີນາຍທີ່ບາບີໂລນ ແລະ
ພວກເຂົາຈຶ່ງໄດ້ຕັ້ງຖິ່ນຖານຢູ່ທີ່ນັ້ນ.

[3]ພວກເຂົາໄດ້ເວົ້າກັນວ່າ, "ມາເຖີດ, ໃຫ້ເຮົາປັ້ນດິນຈີ່ ແລະ ເຜົາມັນໃຫ້ສຸກ." ພວກເຂົາໃຊ້ດິນຈີ່ແທນກ້ອນຫີນ ແລະ ນ້ຳມັນດິນແທນປູນ.
[4]ພວກເຂົາເວົ້າວ່າ, "ຈົ່ງມາເຖີດ, ໃຫ້ພວກເຮົາສ້າງເມືອງ ແລະ ຫໍຄອຍທີ່ມີຍອດສູງເຖິງທ້ອງຟ້າ, ດ້ວຍພວກເຮົາເອງຖ້າເຮົາບໍ່ສ້າງ,
ເຮົາຈະຖືກເຮັດໃຫ້ກະຈັດກະຈາຍໄປທົ່ວເທິງແຜ່ນດິນ."
[5]ດັ່ງນັ້ນພຣະຢາເວຈຶ່ງໄດ້ສະເດັດລົງມາເພື່ອເບິ່ງຕົວເມືອງກັບຫໍຄອຍນັ້ນຊຶ່ງພົງພັນຂອງອາດາມໄດ້ສ້າງຂຶ້ນ.[6]ພຣະຢາເວໄດ້ກ່າວວ່າ, "ເບິ່ງເຖີດ,
ພວກເຂົາເປັນປະຊາຊົນຫນຶ່ງດຽວ, ມີພາສາດຽວ, ແລະ ພວກເຂົາກຳລັງເລີ່ມຕົ້ນເຮັດສິ່ງນີ້! ໃນບໍ່ຊ້າສິ່ງທີ່ພວກເຂົາຕັ້ງໃຈຈະເຮັດ
ຈະບໍ່ມີອັນໃດທີ່ເປັນໄປບໍ່ໄດ້ສຳລັບພວກເຂົາ.[7]ມາເຖີດ, ໃຫ້ພວກເຮົາລົງໄປ ແລະ ເຮັດໃຫ້ພາສາຂອງພວກເຂົາວຸ້ນວາຍທີ່ນັ້ນ,
ເພື່ອທີ່ວ່າພວກເຂົາຈະເວົ້າບໍ່ເຂົ້າໃຈຊຶ່ງກັນ ແລະ ກັນ."
[8]ດັ່ງນັ້ນພຣະຢາເວໄດ້ຊົງເຮັດໃຫ້ພວກເຂົາກະຈັດກະຈາຍໄປ ຈາກທີ່ນັ້ນໄປຢູ່ທົ່ວພື້ນແຜ່ນດິນໂລກ ແລະ ພວກເຂົາກໍໄດ້ຢຸດການກໍ່ສ້າງເມືອງນັ້ນ.
[9]ດັ່ງນັ້ນ, ຈຶ່ງເອີ້ນຊື່ເມືອງນັ້ນວ່າບາເບນ, ເພາະທີ່ນັ້ນພຣະຢາເວໄດ້ຊົງເຮັດໃຫ້ພາສາຂອງບັນດາປະຊາຊາດວຸ້ນວາຍກັນ ແລະ
ຈາກທີ່ນັ້ນພຣະຢາເວໄດ້ເຮັດໃຫ້ພວກເຂົາພັດພາກຈາກກັນໄປທົ່ວເທິງແຜ່ນດິນໂລກ.
[10]ຄົນເຫລົ່ານີ້ຄືເຊື້ອສາຍຂອງເຊມ. ເຊມມີອາຍຸໄດ້ຫນຶ່ງຮ້ອຍປີ, ແລະຫລັງນ້ຳຖ້ວມສອງປີເພິ່ນມີລູກຊາຍຊື່ວ່າອາກປັກຊາດ.
[11]ເຊມໄດ້ມີອາຍຸຍືນຕໍ່ໄປອີກຫ້າຮ້ອຍປີຫລັງຈາກທີ່ເຂົາໄດ້ອາກປັກຊາດ. ເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນ.
[12]ເມື່ອອາກປັກຊາດມີອາຍຸໄດ້ສາມສິບຫ້າປີ, ເພິ່ນມີລູກຊາຍຊື່ວ່າເຊລາ.[13]ອາກປັກສາດໄດ້ມີອາຍຸຍືນຕໍ່ໄປອີກ 403
ປີຫລັງຈາກທີ່ເຂົາໄດ້ເຊລາແລ້ວ. ເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນດ້ວຍ.
[14]ເມື່ອເຊລາອາຍຸໄດ້ສາມສິບປີເພິ່ນມີລູກຊາຍຊື່ເອເບ.[15]ເຊລາໄດ້ມີອາຍຸຍືນຕໍ່ໄປອີກສີ່ຮ້ອຍສາມປີຫລັງຈາກທີ່ເຂົາໄດ້ເອເບ.
ແລ້ວເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນດ້ວຍ.
[16]ເມື່ອເອເບມີອາຍຸໄດ້ສາມສິບສີ່ປີ, ເພິ່ນໄດ້ມີລູກຊາຍຊື່ເປເລັກ.[17]ເອເບໄດ້ມີອາຍຸຍືນຕໍ່ໄປອີກ 430 ປີຫລັງຈາກທີ່ເຂົາໄດ້ເປເລັກ.
ເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນດ້ວຍ.
[18]ເມື່ອເປເລັກອາຍຸໄດ້ສາມສິບປີ, ເພິ່ນໄດ້ມີລູກຊາຍຊື່ເຣອູ.[19]ເປເລັກໄດ້ມີອາຍຸຍືນຕໍ່ໄປອີກສອງຮ້ອຍເກົ້າປີ ຫລັງຈາກທີ່ເຂົາໄດ້ເຣອູ.
ເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນດ້ວຍ.
[20]ເມື່ອເຣອູມີອາຍຸໄດ້ສາມສິບສອງປີ, ເພິ່ນໄດ້ມີລູກຊາຍຊື່ເສຣຸກ.[21]ເຣອູໄດ້ມີອາຍຸຍືນຕໍ່ໄປອີກສອງຮ້ອຍເຈັດປີ ຫລັງຈາກທີ່ເຂົາໄດ້ ເສຣຸກ.
ແລ້ວເຂົາຍັງໄດ້ມີລູກຊາຍ ແລະ ຍິງຕື່ມອີກຫລາຍຄົນດ້ວຍ.
[22]ເມື່ອເສຣຸກອາຍຸໄດ້ສາມສິບປີ, ເພິ່ນໄດ້ມີລູກຊາຍຊື່ ນາໂຮ.[23]ເສຣຸກໄດ້ມີອາຍຸຍືນຕໍ່ໄປອີກ ສອງຮ້ອຍປີ ຫລັງຈາກທີ່ເພິ່ນໄດ້ລູກຊາຍນາໂຮ.
ເພິ່ນຍັງໄດ້ມີລູກຊາຍ ແລະຍິງຕື່ມອີກຫລາຍຄົນ.
[24]ເມື່ອນາໂຮອາຍຸໄດ້ຊາວເກົ້າປີ, ເພິ່ນໄດ້ມີລູກຊາຍຊື່ ເຕຣາ.[25]ນາໂຮໄດ້ມີອາຍຸຍືນຕໍ່ໄປອີກຮ້ອຍສິບເກົ້າປີຫລັງຈາກທີ່ເພິ່ນໄດ້ລູກຊາຍເຕຣາ.
ເພິ່ນຍັງໄດ້ມີລູກຊາຍ ແລະຍິງຕື່ມອີກຫລາຍຄົນ[26]ຫລັງຈາກທີ່ ເຕຣາອາຍຸໄດ້ ເຈັດສິບປີ, ເພິ່ນໄດ້ມີລູກຊາຍ ຊື່: ອັບຣາມ, ນາໂຮ, ແລະຮາຣານ.
[27]ຄົນເຫລົ່ານີ້ເປັນເຊື້ອສາຍຂອງເຕຣາ. ເຕຣາເປັນພໍ່ຂອງອັບຣາມ, ນາໂຮ, ແລະ ຮາຣານ. ຮາຣານເປັນພໍ່ຂອງໂລດ.
[28]ຮາຣານໄດ້ຕາຍໄປຂະນະທີ່ເຕຣາພໍ່ຂອງຕົນຍັງມີຊີວິດຢູ່, ໃນແຜ່ນດິນທີ່ເຂົາເກີດຄືເມືອງອູເຣຂອງຊາວເຄເດັຍ.
[29]ອັບຣາມ ແລະນາໂຮໄດ້ແຕ່ງງານ. ເມຍຂອງອັບຣາມຄືນາງຊາຣາຍ ແລະເມຍຂອງນາໂຮຄືນາງມີລະກາ,
ລູກສາວຂອງຮາຣານຜູ້ເປັນພໍ່ຂອງມິນຄາ ແລະອິດສະຄາ.[30]ເນື່ອງຈາກຊາຣາຍ ເປັນຫມັນ; ນາງຈຶ່ງບໍ່ສາມາດມີລູກໄດ້.
[31]ເຕຣາໄດ້ພາອັບຣາມລູກຊາຍຂອງເຂົາ, ໂລດລູກຊາຍຂອງຮາຣານ, ລູກຊາຍຂອງເຂົາ
ແລະຊາລາຍລູກໃພ້ເມຍຂອງອັບຣາມລູກຊາຍຂອງເຂົາຈາກເມືອງ ອູເຣຂອງຊາວເຄເດຍໄປດ້ວຍກັນເພື່ອໄປຍັງແຜ່ນດິນການາອານ.
ແຕ່ພວກເຂົາໄດ້ມາເຖິງເມືອງຮາຣານ ແລະພັກຢູ່ທີ່ນັ້ນ.[32]ເຕຣາມີອາຍຸໄດ້ສອງຮ້ອຍຫ້າປີແລະຈາກນັ້ນໄດ້ຕາຍໄປທີ່ເມືອງຮາຣານ.


generated on Tue Jun 17 19:01:42 2025

12 [1]ເວລານັ້ນພຣະຢາເວໄດ້ບອກອັບຣາມວ່າ, "ຈົ່ງອອກໄປຈາກປະເທດຂອງເຈົ້າ, ຈາກຍາດຕິພີ່ນ້ອງຂອງເຈົ້າ, ແລະ
ຈາກຄົວເຮືອນຂອງພໍ່ເຈົ້າ, ໄປຍັງດິນແດນທີ່ເຮົາຈະຊີ້ແຈງໃຫ້ແກ່ເຈົ້າ.[2]ເຮົາຈະເຮັດໃຫ້ເຈົ້າເປັນຊົນຊາດທີ່ຍິ່ງໃຫຍ່, ແລະ
ເຈົ້າຈະເປັນພອນ.[3]ເຮົາຈະອວຍພອນຄົນເຫລົ່ານັ້ນທີ່ອວຍພອນເຈົ້າ, ແຕ່ໃຜກໍຕາມທີ່ບໍ່ໃຫ້ກຽດເຈົ້າ ເຮົາຈະສາບແຊ່ງເຂົາ.
ຜ່ານທາງເຈົ້າຄອບຄົວທັງຫມົດຂອງແຜ່ນດິນຈະໄດ້ຮັບພອນ."

[4]ດັ່ງນັ້ນອັບຣາມຈຶ່ງໄດ້ໄປ, ຕາມທີ່ພຣະຢາເວໄດ້ຊົງບອກໃຫ້ເຂົາໄປ, ແລະ ໂລດໄດ້ໄປກັບເຂົາດ້ວຍ.
ອັບຣາມມີອາຍຸໄດ້ເຈັດສິບຫ້າປີເມື່ອເຂົາອອກຈາກເມືອງຮາຣານ.[5]ອັບຣາມໄດ້ພານາງຊາຣາຍເມຍຂອງຕົນ, ໂລດ,
ລູກຊາຍຂອງນ້ອງຊາຍຂອງເຂົາ, ພ້ອມຊັບສິນທັງຫມົດຂອງພວກເຂົາທີ່ພວກເຂົາໄດ້ສະສົມໄວ້, ແລະ
ຄົນທັງຫລາຍທີ່ພວກເຂົາໄດ້ມາໃນເມືອງຮາຣານ. ພວກເຂົາໄດ້ອອກໄປສູ່ດິນແດນການາອານ, ແລະ ໄດ້ມາເຖິງແຜ່ນດິນການາອານ.
[6]ອັບຣາມໄດ້ຜ່ານເຂົ້າໄປໃນແຜ່ນດິນນັ້ນເຂົາໄປໄກເຖິງເມືອງຊີເຄມ, ເຖິງຕົ້ນໂອກແຫ່ງໂມເຣ.
ທີ່ເວລານັ້ນຄົນການາອານໄດ້ອາໄສຢູ່ໃນດິນແດນນັ້ນ.[7]ພຣະຢາເວໄດ້ຊົງປາກົດແກ່ອັບຣາມ, ແລະ ບອກເພິ່ນວ່າ,
"ເຮົາຈະມອບແຜ່ນດິນນີ້ໃຫ້ແກ່ເຊື້ອສາຍທັງຫລາຍຂອງເຈົ້າ." ບ່ອນນີ້ທີ່ອັບຣາມໄດ້ສ້າງແທ່ນບູຊາແກ່ພຣະຢາເວ, ພຣະອົງຜູ້ໄດ້ປາກົດແກ່ເຂົາ.
[8]ຈາກທີ່ນັ້ນເພິ່ນກໍໄດ້ຍົກຍ້າຍໄປທາງໃຕ້ສູ່ເນີນພູທາງທິດຕາເວັນອອກ, ຂອງເມືອງເບັດເອນທີ່ຊຶ່ງເພິ່ນໄດ້ຕັ້ງຄ້າຍພັກຂອງເພິ່ນໂດຍເມືອງ
ເບັດເອນ, ຢູ່ທາງທິດຕາເວັນຕົກ ແລະ ເມືອງອາອີທາງທິດຕາເວັນອອກ. ທີ່ນັ້ນເພິ່ນໄດ້ສ້າງແທ່ນບູຊາແກ່ພຣະຢາເວ ແລະ
ອອກນາມຊື່ຂອງພຣະຢາເວ.[9]ຈາກນັ້ນອັບຣາມຍັງຄົງໄດ້ເດີນທາງ, ມຸ່ງຫນ້າໄປຍັງເນເກບ.
[10]ໄດ້ເກີດມີການອຶດຢາກໃນແຜ່ນດິນການາອານ, ດັ່ງນັ້ນອັບຣາມລົງໄປຍັງປະເທດອີຢິບ,
ເພື່ອທີ່ຈະອາໄສຢູ່ເພາະການຂາດແຄນອາຫານໄດ້ຮຸນແຮງຫລາຍຂຶ້ນໃນແຜ່ນດິນ.[11]ເມື່ອເພິ່ນຈະເຂົ້າໄປໃນປະເທດອີຢິບ,
ເພິ່ນໄດ້ເວົ້າກັບຊາຣາຍເມຍຂອງຕົນວ່າ, "ເບິ່ງແມ, ເຮົາຮູ້ວ່າເຈົ້າເປັນຍິງທີ່ສວຍງາມ.
[12]ເມື່ອຄົນອີຢິບເຫັນເຈົ້າພວກເຂົາຈະເວົ້າວ່ານີ້ຄືເມຍຂອງເຂົາ, ແລ້ວພວກເຂົາກໍຈະຂ້າເຮົາເສຍແຕ່ໃຫ້ເຈົ້າມີຊີວິດຢູ່.[13]ດັ່ງນັ້ນຈົ່ງບອກວ່າ,
ເຈົ້າເປັນນ້ອງສາວຂອງເຮົາດັ່ງນັ້ນຈະເປັນການດີສໍາລັບເຮົາເພາະເຈົ້າ, ແລະ ດັ່ງນັ້ນຊີວິດຂອງເຮົາຈະຖືກສະຫງວນໄວ້ເພາະເຈົ້າ."
[14]ແລະກໍເປັນຢ່າງນັ້ນເມື່ອອັບຣາມໄດ້ເຂົ້າໄປໃນອີຢິບ, ຊາວອີຢິບເຫັນວ່າຊາຣາຍງາມຫລາຍ.[15]ເຈົ້າຊາຍຂອງຟາໂຣໄດ້ເຫັນນາງ
ເວົ້າຍົກຍ້ອງນາງຕໍ່ຟາໂຣ, ນາງໄດ້ຖືກນໍາໄປຍັງຣາຊວັງຂອງຟາໂຣ.[16]ຟາໂຣໄດ້ຊົງເບິ່ງແຍງອັບຣາມເປັນຢ່າງດີເພາະເຫັນແກ່ນາງ, ແລະ
ໄດ້ມອບຝູງແກະ, ຝູງງົວ, ແບ້, ລວາໂຕຜູ້, ແລະ ຄົນຮັບໃຊ້ຊາຍ, ຄົນຮັບໃຊ້ຍິງ, ລວາໂຕແມ່, ແລະ ອູດທັງຫລາຍໃຫ້ກັບເຂົາດ້ວຍ.
[17]ພຣະຢາເວໄດ້ຊົງເຮັດໃຫ້ເກີດໄພພິບັດຮ້າຍແຮງກັບຟາໂຣ ແລະຣາຊວົງຂອງພະອົງ, ເພາະຊາຣາຍເມຍຂອງອັບຣາມ.
[18]ຟາໂຣໄດ້ຊົງເອີ້ນອັບຣາມມາ, ແລະ ຖາມວ່າ, "ເປັນຫຍັງເຈົ້າຈຶ່ງເຮັດຕໍ່ເຮົາແບບນີ້? ເປັນຫຍັງເຈົ້າບໍ່ບອກເຮົາວ່ານາງເປັນເມຍຂອງເຈົ້າ?
[19]ເປັນຫຍັງເຈົ້າຈຶ່ງບອກວ່າ, ນາງຄືນ້ອງສາວຂອງເຈົ້າ? ດັ່ງນັ້ນເຮົາຈຶ່ງນໍານາງມາໄວ້ເປັນເມຍຂອງເຮົາ. ບັດນີ້ນາງຄືເມຍຂອງເຈົ້າ,
ຈົ່ງເອົານາງຄືນໄປ, ແລະ ໄປຕາມທາງຂອງເຈົ້າ."[20]ຈາກນັ້ນຟາໂຣໄດ້ຊົງອອກຄໍາສັ່ງແກ່ຄົນຂອງພະອົງກ່ຽວກັບເພິ່ນ, ແລະ
ພວກເຂົາໄດ້ສົ່ງເພິ່ນໄປພ້ອມກັບເມຍຂອງລາວ ແລະ ທຸກສິ່ງຂອງທີ່ລາວມີຢູ່.


generated on Tue Jun 17 19:01:42 2025

13 [1]ດັ່ງນັ້ນອັບຣາມໄດ້ອອກຈາກອີຢິບ ແລະ ເຂົ້າໄປຍັງເນເກບ, ເພິ່ນ, ແລະ ເມຍຂອງເພິ່ນ, ແລະ ທຸກສິ່ງທີ່ເພິ່ນມີ. ແລະ
ໂລດກໍໄດ້ໄປກັບພວກເພິ່ນດ້ວຍ.[2]ຂະນະນີ້ອັບຣາມເປັນຄົນຮັ່ງມີຫລາຍ, ທັງໃນດ້ານຂອງ, ຝູງສັດລ້ຽງພ້ອມທັງເງິນ, ແລະ ຄຳ.

[3]ເພິ່ນໄດ້ເດີນທາງຕໍ່ໄປຈາກເນເກບເຖິງເບັດເອນ, ແລະ ໄປເຖິງບ່ອນທີ່ຕົນເຄີຍຕັ້ງຄ້າຍພັກຄັ້ງກ່ອນ, ຢູ່ລະຫວ່າງເມືອງເບັດເອນ ກັບເມືອງອາອີ.
[4]ເພິ່ນໄປຍັງບ່ອນທີ່ຕັ້ງແທ່ນບູຊາທີ່ເພິ່ນໄດ້ສ້າງໄວ້ແຕ່ກ່ອນນັ້ນ. ທີ່ນີ້ອັບຣາມໄດ້ຮ້ອງອອກພຣະນາມພຣະຢາເວ.
[5]ສ່ວນໂລດ, ທີ່ເດີນທາງມາກັບອັບຣາມ, ກໍມີຝູງສັດ, ຜູ້ຄົນ, ແລະ ເຕັນຈຳນວນຫລວງຫລາຍດ້ວຍ.
[6]ແຜ່ນດິນນັ້ນບໍ່ກວ້າງຂວາງຫລາຍພໍສຳລັບພວກເຂົາທີ່ຈະອາໄສຢູ່ໃກ້ກັນ, ເພາະວ່າຊັບສິນຂອງພວກເຂົາມີຫລວງຫລາຍ,
ດັ່ງນັ້ນພວກເຂົາຈຶ່ງບໍ່ສາມາດຢູ່ນຳກັນໄດ້.[7]ແລະ ເກີດການຜິດຖຽງກັນລະຫວ່າງຄົນລ້ຽງສັດຂອງອັບຣາມ ແລະ ຄົນລ້ຽງສັດຂອງໂລດ.
ໃນເວລານັ້ນຄົນການາອານ ແລະ ຄົນເປຣີຊີໄດ້ອາໄສຢູ່ໃນດິນແດນນັ້ນ.
[8]ດັ່ງນັ້ນອັບຣາມຈຶ່ງໄດ້ເວົ້າກັບໂລດວ່າ, "ຢ່າໃຫ້ມີການຜິດຖຽງກັນລະຫວ່າງເຮົາກັບເຈົ້າ, ແລະ ລະຫວ່າງຄົນຂອງເຈົ້າ ແລະ ຄົນຂອງເຮົາເລີຍ;
ເພາະພວກເຮົາເປັນຍາດກັນ.[9]ແຜ່ນດິນທັງຫມົດຢູ່ຕໍ່ຫນ້າເຈົ້າແລ້ວບໍ່ແມ່ນບໍ? ໄປເຖີດເຈົ້າຈົ່ງແຍກໄປຈາກເຮົາ. ຖ້າເຈົ້າໄປທາງຊ້າຍ,
ເຮົາກໍຈະໄປທາງຂວາ, ຫລືຖ້າເຈົ້າໄປທາງຂວາເຮົາກໍຈະໄປທາງຊ້າຍ."
[10]ໂລດກໍໄດ້ຫລຽວໄປຮອບໆ, ແລະ ໄດ້ເຫັນວ່າທົ່ງຮາບພຽງຂອງແມ່ນ້ຳຈໍແດນທັງຫມົດເປັນທີ່ມີນ້ຳບໍຣິບູນທຸກແຫ່ງໄປຈົນເຖິງເມືອງໂຊອາ,
ເຫມືອນດັ່ງສວນຂອງພຣະຢາເວ, ເຫມືອນດິນແດນອີຢິບ. ນີ້ເປັນສະພາບກ່ອນທີ່ພຣະຢາເວຈະທຳລາຍເມືອງໂຊໂດມກັບເມືອງໂກໂມຣາ.
[11]ດັ່ງນັ້ນໂລດຈຶ່ງເລືອກເອົາທົ່ງຮາບພຽງທັງຫມົດຂອງແມ່ນ້ຳຈໍແດນສຳລັບຕົວເຂົາເອງ, ແລະ ໄດ້ເດີນທາງໄປທາງທິດຕາເວັນອອກ, ແລະ ຍາດພີ່
ນ້ອງທັງສອງກໍໄດ້ແຍກທາງກັນໄປ.
[12]ອັບຣາມໄດ້ອາໄສຢູ່ໃນດິນແດນການາອານ, ສ່ວນໂລດໄດ້ອາໄສຢູ່ທ່າມກາງເມືອງທັງຫລາຍຂອງທົ່ງຮາບພຽງນັ້ນ.
ເຂົາຕັ້ງເຕັນຂອງເຂົາຢູ່ຫ່າງໄກຈາກເມືອງໂຊໂດມ.[13]ສ່ວນປະຊາຊົນໃນເມືອງໂຊໂດມນັ້ນເປັນຄົນບາບຊົ່ວຮ້າຍຕໍ່ສູ້ພຣະຢາເວ.
[14]ພຣະຢາເວໄດ້ບອກກັບອັບຣາມວ່າ ຫລັງຈາກທີ່ໂລດໄດ້ແຍກຕົວອອກໄປຈາກເຂົາແລ້ວ,
"ຈົ່ງແນມເບິ່ງຈາກບ່ອນທີ່ເຈົ້າກຳລັງຢືນຢູ່ນີ້ໄປທາງທິດເຫນືອ, ທິດໃຕ້, ທິດຕາເວັນອອກ, ແລະ ທິດຕາເວັນຕົກ.
[15]ແຜ່ນດິນທັງຫມົດທີ່ເຈົ້າແນມເຫັນນີ້, ເຮົາຈະມອບໃຫ້ແກ່ເຈົ້າ, ແລະ ແກ່ເຊື້ອສາຍທັງຫລາຍຂອງເຈົ້າຕະຫລອດໄປເປັນນິດ.
[16]ເຮົາຈະເຮັດໃຫ້ບັນດາເຊື້ອສາຍຂອງເຈົ້າມີຫລວງຫລາຍ, ເຫມືອນດັ່ງຜົງຂີ້ຝຸ່ນດິນດັ່ງນັ້ນຖ້າໃຜສາມາດນັບຜົງຂີ້ຝຸ່ນດິນໄດ້,
ກໍຈະນັບເຊື້ອສາຍຂອງເຈົ້າໄດ້ຢ່າງນັ້ນ.[17]ຈົ່ງລຸກຂຶ້ນ, ເດີນໄປໃຫ້ທົ່ວແຜ່ນດິນນີ້ທັງດ້ານຍາວ ແລະ
ທັງດ້ານກວ້າງເພາະວ່າເຮົາຈະມອບແຜ່ນດິນນີ້ໃຫ້ເຈົ້າ."[18]ດັ່ງນັ້ນອັບຣາມຈຶ່ງໄດ້ຍົກຍ້າຍເຕັນຂອງເພິ່ນ, ແລະ
ມາອາໄສຢູ່ໃກ້ຕົ້ນໂອກແຫ່ງມຳເຣ, ທີ່ຊຶ່ງຢູ່ໃນເຮັບໂຣນ, ແລະ ທີ່ນັ້ນເພິ່ນໄດ້ສ້າງແທ່ນບູຊາແກ່ພຣະຢາເວ.


generated on Tue Jun 17 19:01:42 2025

14 1ໃນສະໄຫມຂອງອຳຣາເຟນ, ກະສັດຂອງເມືອງຊີນາ, ເຈົ້າອາຣີໂອກເມືອງເອນລາຊາ, ເຈົ້າເຄໂດລາໂອເມກະສັດເມືອງເອລາມ, ແລະ
ຕີດານກະສັດເມືອງກົວອິມ,2ພວກເຂົາໄດ້ເຮັດເສິກຕໍ່ສູ້ກັບເບຣາ, ກະສັດເມືອງໂຊໂດມ, ບີຊາ ແຫ່ງກະສັດເມືອງໂກໂມຣາ,
ຊີນັບກະສັດເມືອງອັດມາ, ເຊເມເບກະສັດເມືອງເຊບົວອິມ, ແລະ ກະສັດເມືອງເບລາ (ຖືກເອີ້ນວ່າໂຊອາດ້ວຍ).

3ພາຍກະສັດທັງຫ້າຄົນເຫລົ່ານີ້ໄດ້ຮ່ວມມືກັນທີ່ພູເຂົາສິດດິມ (ຖືກເອີ້ນວ່າທະເລເກືອດ້ວຍ).4ພວກເຂົາໄດ້ຮັບໃຊ້ເຄໂດລາໂອເມມາສິບສອງປີ,
ແຕ່ໃນປີທີສິບສາມ ພວກເຂົາໄດ້ພາກັນກໍການກະບົດຂຶ້ນ.5ຈາກນັ້ນໃນປີທີສິບສີ່, ເຄໂດລາໂອເມ ແລະ ກະສັດທັງຫລາຍຜູ້ທີ່ຢູ່ຝ່າຍເຂົາໄດ້ມາ
ແລະ ໂຈມຕີຄົນເຣຟາອິມທີ່ເມືອງ ອັດຊະຕາໂຣດ ການາອິມ, ຄົນຊູຊິມ ທີ່ເມືອງຮາມ, ຄົນເອມິມ ທີ່ເມືອງກີຣິອາດທາອິມ,6ແລະ
ຄົນໂຮຣີທີ່ດິນແດນພູເຂົາເສອີ, ຂອງພວກເຂົາໄກໄປ, ເຖິງເມືອງເອນປາຣານ, ຊຶ່ງຢູ່ໃກ້ທະເລຊາຍ.
7ຈາກນັ້ນພວກເຂົາກໍໄດ້ກັບມາຍັງເມືອງມິດສະປັດ. (ຖືກເອີ້ນອີກວ່າກາເດັດດ້ວຍ.), ແລະ ຮົບຊະນະທຸກເມືອງຂອງຊາວອາມາເຫລັກ, ແລະ
ຄົນອາໂມທີ່ອາໄສຢູ່ທີ່ເມືອງຮາຊາໂຊນຕາມາ.8ຈາກນັ້ນກະສັດເມືອງໂຊໂດມ, ກະສັດເມືອງໂກໂມຣາ, ກະສັດເມືອງອັດມາ,
ກະສັດເມືອງເຊບົວອິມ, ແລະ ກະສັດເມືອງເບລາ (ທີ່ເອີ້ນວ່າໂຊອາດ້ວຍ) ໄດ້ອອກໄປ9ແລະ ຕຽມຕົວເຮັດສົງຄາມສູ້ຮົບກັບເຄໂດລາໂອເມ,
ກະສັດເມືອງເອລາມ, ຕີດານກະສັດເມືອງກົວອິມ, ອຳຣາເຟນກະສັດເມືອງຊີນາ, ອາຣີໂອກ, ກະສັດເມືອງເອນລາຊາ;
ລວມເປັນກະສັດສີ່ພະອົງຕໍ່ສູ້ກະສັດຫ້າພະອົງ.
10ຂະນະນັ້ນທີ່ຮ່ອມເຂົາສິດດິມເຕັມໄປດ້ວຍບໍ່ນ້ຳມັນດິບ, ແລະ ເມື່ອກະສັດເມືອງໂຊໂດມ ແລະ ເມືອງໂກໂມຣາຫລົບຫນີນັ້ນ,
ພວກເຂົາໄດ້ຕົກລົງໃນບໍ່ນັ້ນ. ສ່ວນກະສັດຄົນອື່ນໄດ້ຫລົບລີ້ໄປຍັງພູເຂົາ.11ດັ່ງນັ້ນພວກຂ້າເສິກໄດ້ຢຶດເອົາສະບຽງອາຫານ ແລະ
ສິ່ງຂອງທັງຫມົດຂອງເມືອງໂຊໂດມ, ແລະ ໂກໂມຣາແລ້ວຈາກໄປ.12ເມື່ອພວກເຂົາຈາກໄປ, ພວກເຂົາໄດ້ຈັບຕົວໂລດ,
ຫລານຊາຍຂອງອັບຣາມທີ່ອາໄສຢູ່ໃນເມືອງ ໂຊໂດມ, ແລະ ຊັບສິນເງິນຄຳທັງຫມົດຂອງເຂົາໄປດ້ວຍ.
13ມີຊາຍຄົນຫນຶ່ງຫນີມາໄດ້ ແລະ ໄດ້ມາບອກອັບຣາມຄົນເຮັບເຣີ. ເຂົາອາໄສຢູ່ໃກ້ຕົ້ນໂອກທີ່ເປັນຂອງມຳເຣ, ຄົນອາໂມໄຣຜູ້ຊຶ່ງເປັນພີ່ນ້ອງ.
ຂອງເອັດຊະໂຄນ ແລະ ອາເນ, ຄົນພວກນີ້ທັງຫມົດເປັນມິດກັບອັບຣາມ.
14ໃນຂະນະນັ້ນເມື່ອອັບຣາມໄດ້ຍິນວ່າພວກສັດຕຣູໄດ້ຈັບຕົວຫລານຊາຍຂອງຕົນໄປ, ເພິ່ນໄດ້ຜູ້ຊາຍທີ່ໄດ້ຮັບການຝຶກຂອງເພິ່ນຈຳນວນ 318
ຄົນຜູ້ຊຶ່ງເກີດໃນຄ້າຍພັກຂອງເພິ່ນ, ແລະ ເພິ່ນໄດ້ໄລ່ຕາມພວກເຂົາໄປຈົນເຖິງເມືອງດານ.
15ແບ່ງຄົນຂອງເພິ່ນອອກຕໍ່ສູ້ກັບພວກເຂົາໃນເວລາກາງຄືນ ແລະໂຈມຕີພວກເຂົາ, ແລະ ໄລ່ຕິດຕາມພວກເຂົາໄປໄກເຖິງເມືອງໂຮບາ,
ຊຶ່ງຢູ່ທາງເຫນືອຂອງເມືອງດາມັສກັດ.16ຈາກນັ້ນເຂົາກໍໄດ້ນຳສິ່ງທີ່ຖືກຢຶດຄືນມາໄດ້ທັງຫມົດ, ແລະ ເພິ່ນຍັງນຳເອົາໂລດຫລານຊາຍຂອງຕົນ
ແລະຊັບສົມບັດຂອງລາວພ້ອມທັງບັນດາແມ່ຍິງ ແລະ ຄົນອື່ນໆກັບມາດ້ວຍ.
17ຫລັງຈາກອັບຣາມໄດ້ກັບມາຈາກການເຮັດໃຫ້ເຈົ້າເຄໂດລາໂອເມ ແລະ ກະສັດທັງຫລາຍທັງຫລາຍທີ່ຢູ່ຝ່າຍເຂົາຜ່າຍແພ້ແລ້ວ,
ກະສັດເມືອງໂຊໂດມໄດ້ອອກມາຕ້ອນຮັບເພິ່ນຢູ່ທີ່ຮ່ອມພູຊາເວ (ມີຊື່ອີກວ່າຮ່ອມພູຂອງກະສັດດ້ວຍ).18ເມນຄີເຊເດັກ,
ກະສັດແຫ່ງນະຄອນຊາເລັມ, ໄດ້ນຳເອົາເຂົ້າຈີ່ກັບ, ເຫລົ້າອະງຸ່ນອອກມາໃຫ້. ເພິ່ນເປັນປະໂລຫິດຂອງພຣະເຈົ້າສູງສຸດ.
19ເພິ່ນໄດ້ອວຍພອນອັບຣາມວ່າ, "ພຣະພອນຈົ່ງມີແດ່ອັບຣາມໂດຍພຣະເຈົ້າສູງສຸດ, ຜູ້ຊຶ່ງສ້າງທ້ອງຟ້າ ແລະ ແຜ່ນດິນໂລກ,
20ສັນຣະເສີນພຣະເຈົ້າສູງສຸດ, ຜູ້ຊຶ່ງເຮັດໃຫ້ສັດຕຣູຂອງເຈົ້າຢູ່ໃນມືຂອງເຈົ້າ."
ຈາກນັ້ນອັບຣາມກໍໄດ້ຖວາຍຫນຶ່ງສ່ວນສິບຂອງທຸກສິ່ງໃຫ້ແກ່ເພິ່ນ.
21ກະສັດເມືອງໂຊໂດມໄດ້ກ່າວກັບອັບຣາມວ່າ, "ຈົ່ງໃຫ້ປະຊາຊົນແກ່ຂ້ານ້ອຍ, ແລະ
ເອົາສິ່ງຂອງໄປສຳລັບຕົວເຈົ້າເອງ."22ແຕ່ອັບຣາມໄດ້ຕອບກັບກະສັດເມືອງໂຊໂດມວ່າ, "ຂ້ານ້ອຍໄດ້ຍົກມືຂອງຂ້ານ້ອຍໃຫ້ແກ່ພຣະຢາເວ,
ພຣະເຈົ້າຜູ້ສູງສຸດ, ຜູ້ຊົງສ້າງຟ້າ ແລະແຜ່ນດິນໂລກ,23ວ່າຂ້ານ້ອຍຈະບໍ່ເອົາເສັ້ນດ້າຍຈັກຫນຶ່ງເສັ້ນ, ຫລືສິ່ງໃດໆທີ່ເປັນຂອງທ່ານ,
ດັ່ງນັ້ນທ່ານຈະບໍ່ສາມາດກ່າວໄດ້ວ່າ, ເຮົາໄດ້ເຮັດໃຫ້ອັບຣາມຮັ່ງມີ.24ຂ້ານ້ອຍຈະບໍ່ຮັບສິ່ງໃດເລີຍ,
ຍົກເວັ້ນສິ່ງທີ່ບັນດາຄົນຫນຸ່ມທັງຫລາຍໄດ້ກິນ ແລະ ສ່ວນແບ່ງຂອງພວກຜູ້ຊາຍທີ່ໄປກັບຂ້ານ້ອຍ. ຂໍໃຫ້ອາເນ, ເອັດຊະໂຄນ, ແລະ
ມຳເຣໄດ້ຮັບສ່ວນຂອງພວກເຂົາເຖີດ."

 generated on Tue Jun 17 19:01:42 2025

15 [1]ຫລັງຈາກສິ່ງເຫລົ່ານີ້ແລ້ວຄຳສັ່ງຂອງພຣະຢາເວໄດ້ມາເຖິງອັບຣາມ, ໃນນິມິດກ່າວວ່າ, "ຢ່າຢ້ານເລີຍ, ອັບຣາມ! ເຮົາເປັນໂລ້ກຳ
ບັງຂອງເຈົ້າ ແລະ ບຳເຫນັດອັນຍິ່ງໃຫຍ່ຂອງເຈົ້າ."[2]ອັບຣາມໄດ້ຕອບວ່າ, "ອົງພຣະຜູ້ເປັນເຈົ້າພຣະຢາເວ,
ພຣະອົງຈະຊົງໃຫ້ສິ່ງໃດແກ່ຂ້ານ້ອຍ, ໃນເມື່ອຂ້ານ້ອຍຍັງບໍ່ມີລູກຊາຍ, ແລະ ຜູ້ສືບທອດມໍຣະດົກຂອງບ້ານຂ້ານ້ອຍກໍຄືເອລີເອເຊ
ຊາວດາມັສກັດບໍ?"[3]ອັບຣາມໄດ້ທູນອີກວ່າ, "ຕັ້ງແຕ່ພຣະອົງບໍ່ໄດ້ໃຫ້ຂ້ານ້ອຍມີລູກ, ເບິ່ງແມ,
ພໍ່ບ້ານຂອງຂ້ານ້ອຍກໍຄືຜູ້ສືບທອດມໍຣະດົກຂອງຂ້ານ້ອຍ."

[4]ຈາກນັ້ນ, ເບິ່ງແມ, ຄຳສັ່ງຂອງພຣະຢາເວໄດ້ມາເຖິງເຂົາກ່າວວ່າ, "ຄົນຜູ້ນີ້ຈະບໍ່ແມ່ນຜູ້ຮັບມໍຣະດົກຂອງເຈົ້າ,
ແຕ່ຜູ້ທີ່ຈະມາຈາກຮ່າງກາຍຂອງເຈົ້າຈະເປັນຜູ້ຮັບມໍຣະດົກຂອງເຈົ້າ."[5]ຈາກນັ້ນພຣະອົງໄດ້ຊົງພາ ເພິ່ນອອກໄປຂ້າງນອກ, ແລະ ບອກວ່າ,
"ຈົ່ງເບິ່ງເທິງທ້ອງຟ້າ, ແລະ ນັບດວງດາວທັງຫລາຍຖ້າເຈົ້າສາມາດນັບພວກມັນໄດ້." ຈາກນັ້ນພຣະອົງໄດ້ບອກແກ່ເຂົາອີກວ່າ,
"ດັ່ງນັ້ນເຊື້ອສາຍຂອງເຈົ້າກໍຈະເປັນຢ່າງນັ້ນ."
[6]ເຂົາເຊື່ອພຣະຢາເວ, ແລະ ພຣະອົງຊົງຖືວ່ານີ້ຄືຄວາມຊອບທັມຂອງເຂົາ.[7]ພຣະອົງໄດ້ກ່າວແກ່ເພິ່ນວ່າ, "ເຮົາຄືພຣະຢາເວ,
ຜູ້ທີ່ນຳພາເຈົ້າອອກມາຈາກເມືອງອູເຣຂອງຄົນເຄນເດຍ, ເພື່ອທີ່ຈະໃຫ້ດິນແດນນີ້ເປັນກຳມະສິດຂອງເຈົ້າ."[8]ເພິ່ນໄດ້ເວົ້າວ່າ,
"ອົງພຣະຜູ້ເປັນເຈົ້າພຣະຢາເວ, ຂ້ານ້ອຍຈະຮູ້ໄດ້ຢ່າງໃດ ວ່າຂ້ານ້ອຍຈະໄດ້ແຜ່ນດິນນີ້ເປັນກຳມະສິດ?"
[9]ຈາກນັ້ນພຣະອົງໄດ້ສັ່ງເພິ່ນວ່າ, "ຈົ່ງເອົາງົວແມ່ອາຍຸສາມປີຫນຶ່ງໂຕ, ແບ້ແມ່ອາຍຸສາມປີຫນຶ່ງໂຕ, ແກະເຖິກອາຍຸສາມປີຫນຶ່ງໂຕ,
ນົກເຂົາຫນຶ່ງໂຕ, ກັບນົກກາງແກໜຸ່ມຫນຶ່ງໂຕມາໃຫ້ເຮົາ."[10]ເພິ່ນໄດ້ນຳສິ່ງເຫລົ່ານີ້ທັງຫມົດມາໃຫ້ພຣະອົງ, ແລະ ຕັດອອກເປັນສອງທ່ອນ, ແລະ
ວາງແຕ່ລະທ່ອນໄວ້ກົງກັນຂວ້າມກັນ, ແຕ່ເຂົາບໍ່ໄດ້ຕັດແບ່ງພວກນົກ.[11]ເມື່ອພວກນົກທີ່ລ່າເຫຍື່ອບິນລົງມາເທິງເຫລົ່າຊາກສັດທັງຫລາຍ,
ອັບຣາມກໍໄດ້ໄລ່ພວກມັນໄປ.
[12]ຈາກນັ້ນເມື່ອດວງຕາເວັນໄດ້ລັບຂອບຟ້າແລ້ວ, ອັບຣາມຮູ້ສຶກງ່ວງນອນ ແລະ, ເບິ່ງເຖີດ, ຄວາມມືດທີ່ເລິກລ້ຳແລະ
ຫນ້າຢ້ານກົວອັນໃຫຍ່ກໍໄດ້ມາຄອບງຳເພິ່ນໄວ້.[13]ພຣະຢາເວຈຶ່ງໄດ້ກ່າວກັບອັບຣາມວ່າ,
"ຈົ່ງຮູ້ແນ່ເຖີດວ່າເຊື້ອສາຍທັງຫລາຍຂອງເຈົ້າຈະເປັນຄົນຕ່າງດ້າວຢູ່ໃນດິນແດນທີ່ບໍ່ແມ່ນຂອງພວກເຂົາ, ແລະ ຈະຖືກບັງຄັບໃຫ້ເປັນທາດ ແລະ
ຖືກກົດຂີ່ຂົ່ມເຫັງເປັນເວລາສີ່ຮ້ອຍປີ.
[14]ເຮົາຈະພິພາກສາຊົນຊາດນັ້ນທີ່ ພວກເຂົາຮັບໃຊ້ເຊັ່ນນັ້ນ, ແລະຫລັງຈາກນັ້ນພວກເຂົາຈະອອກມາພ້ອມກັບຊັບສິນບັດຢ່າງຫລວງຫລາຍ.
[15]ແຕ່ເຈົ້າຈະໄປຫາບັນພະບຸຣຸດຂອງເຈົ້າຢ່າງສະຫງົບ, ແລະ ເຈົ້າຈະຖືກຝັງເມື່ອອາຍຸຫລາຍແລ້ວ.
[16]ໃນຊົ່ວອາຍຸຄົນທີ່ສີ່ພວກເຂົາຈະມາທີ່ນີ້ອີກຄັ້ງ, ເພາະວ່າຄວາມຊົ່ວຊ້າຂອງຊາວອາໂມໄຣຍັງບໍ່ເຖິງຂີດສຸດ."
[17]ເມື່ອດວງຕາເວັນຕົກດິນ ແລະ ມືດແລ້ວ, ເບິ່ງເຖີດມີຫມໍ້ຄວັນໄຟ, ແລະ ມີໂຄມໄຟໄດ້ຜ່ານໄປລະຫວ່າງຊາກສັດເຫລົ່ານັ້ນ.
[18]ໃນວັນນັ້ນພຣະຢາເວໄດ້ຊົງຕັ້ງພັນທະສັນຍາກັບອັບຣາມ, ກ່າວວ່າ, "ໂດຍໃນນີ້ເຮົາມອບດິນແດນນີ້ໃຫ້ແກ່ເຊື້ອສາຍທັງຫລາຍຂອງເຈົ້າ,
ຈາກແມ່ນ້ຳແຫ່ງອີຢິບ ຈົນເຖິງແມ່ນ້ຳໃຫຍ່, ຄືແມ່ນ້ຳເອີຟຣັດ[19]ດິນແດນຂອງຄົນເກນິດ, ຄົນເກນິດຊີ, ຄົນກັດໂມ,[20]ຄົນຮິດຕີ, ຄົນເປຣີຊີ,
ຄົນເຣຟາອີມ,[21]ຄົນອາໂມ, ຄົນການາອານ, ຄົນກີກາຊີ, ແລະ ຄົນເຢບຸດ."

 generated on Tue Jun 17 19:01:42 2025

# 16

1ເຖິງວັນນີ້ນາງຊາຣາຍເມຍອັບຣາມ, ຍັງບໍ່ໄດ້ມີລູກໃຫ້ແກ່ອັບຣາມ, ແຕ່ນາງມີຄົນໃຊ້ຊາວອີຢິບ, ຄົນຫນຶ່ງຊື່ຮາກາ.
2ດັ່ງນັ້ນຊາຣາຍຈຶ່ງເວົ້າກັບອັບຣາມວ່າ, "ເບິ່ງເຖີດ, ພຣະຢາເວບໍ່ຍອມໃຫ້ຂ້ອຍມີລູກ. ໄປເຖີດໄປຫລັບນອນກັບສາວໃຊ້ຂອງຂ້ອຍ.
ບາງທີນາງຈະເກີດລູກໃຫ້ຂ້ອຍກໍໄດ້." ອັບຣາມກໍໄດ້ຟັງສຽງຂອງຊາຣາຍ.
3ນັ້ນເປັນເວລາສິບປີຫລັງຈາກທີ່ອັບຣາມໄດ້ອາໄສຢູ່ໃນແຜ່ນດິນການາອານ,
ທີ່ຊາຣາຍເມຍຂອງອັບຣາມໄດ້ຍົກຮາກາສາວໃຊ້ຊາວອີຢິບຂອງນາງໃຫ້ເປັນເມຍຂອງອັບຣາມ.4ດັ່ງນັ້ນເຂົາຈຶ່ງໄດ້ຫລັບນອນກັບຮາກາ, ແລະ
ນາງໄດ້ຕັ້ງທ້ອງ. ເມື່ອນາງຮູ້ວ່າຕົນຕັ້ງທ້ອງ, ນາງຈຶ່ງໄດ້ຫມິ່ນປະຫມາດນາຍຂອງນາງ.

5ຊາຣາຍຈຶ່ງໄດ້ເວົ້າກັບອັບຣາມວ່າ, "ຄວາມທຸກນີ້ຕົກແກ່ຂ້ອຍເພາະທ່ານ. ຂ້ອຍໄດ້ຍົກສາວໃຊ້ຂອງຂ້ອຍໃຫ້ເປັນເມຍຂອງທ່ານ, ແລະ
ເມື່ອນາງຮູ້ວ່ານາງຕັ້ງທ້ອງ, ຂ້ອຍກໍຖືກຫມິ່ນປະຫມາດໃນສາຍຕາຂອງນາງ.
ຂໍໃຫ້ພຣະຢາເວຕັດສິນຄວາມລະຫວ່າງຂ້ອຍກັບທ່ານ."6ແຕ່ອັບຣາມໄດ້ເວົ້າກັບຊາຣາຍວ່າ, "ນີ້ເດ, ຍິງສາວໃຊ້ຂອງເຈົ້າຢູ່ໃນອຳນາດຂອງເຈົ້າ,
ຈົ່ງເຮັດຕໍ່ນາງຕາມທີ່ເຈົ້າເຫັນວ່າດີທີ່ສຸດ." ດັ່ງນັ້ນຊາຣາຍຈຶ່ງຂົ່ມເຫັງນາງຢ່າງຫນັກ, ແລະ ນາງກໍໄດ້ຫນີໄປຈາກນາງ.
7ທູດສະຫວັນຂອງພຣະຢາເວໄດ້ພົບນາງຮາກາໃກ້ບໍ່ນ້ຳພຸໃນຖິ່ນທຸຣະກັນດານ, ບໍ່ນ້ຳພຸທີ່ຢູ່ເທິງທາງໄປເມືອງຊູເຣ.8ທ່ານຈຶ່ງຖາມວ່າ, "ຮາກາ,
ສາວໃຊ້ຂອງຊາຣາຍເຈົ້າມາແຕ່ໃສ? ແລະ ເຈົ້າກຳລັງຈະໄປໃສ? ນາງຈຶ່ງຕອບວ່າ, "ຂ້ານ້ອຍກຳລັງຈະຫນີຈາກນາຍຂອງຂ້ານ້ອຍ
ນາງຊາຣາຍ."
9ທູດສະຫວັນຂອງພຣະຢາເວໄດ້ເວົ້າກັບນາງວ່າ, "ຈົ່ງກັບໄປຫານາຍຍິງຂອງເຈົ້າ, ແລະ
ຖ່ອມຕົວຢູ່ໃຕ້ອຳນາດຂອງນາງ."10ຈາກນັ້ນທູດສະຫວັນຂອງພຣະຢາເວໄດ້ເວົ້າກັບນາງວ່າ,
"ເຮົາຈະເພີ່ມເຊື້ອສາຍຂອງເຈົ້າຢ່າງທະວີຄູນດັ່ງນັ້ນພວກເຂົາຈະມີຈຳນວນມາກມາຍ, ເກີນກວ່າຈະນັບໄດ້."
11ເບິ່ງແມ ເຈົ້າຕັ້ງທ້ອງ, ແລະ ກຳລັງຈະໄດ້ລູກຊາຍ, ແລະ ເຈົ້າຈະເອີ້ນຊື່ຂອງເຂົາວ່າອິຊະມາເອນ.
ເພາະວ່າພຣະຢາເວໄດ້ຊົງຮັບຟັງຄວາມທຸກລຳບາກຂອງເຈົ້າທຸກປະການ.12ເຂົາຈະເປັນດັ່ງລໍປ່າຂອງຜູ້ຊາຍ, ເຂົາຈະຕໍ່ສູ້ກັບຜູ້ຊາຍທຸກຄົນ. ແລະ
ຜູ້ຊາຍທຸກຄົນຈະເປັນສັດຕຣູຕໍ່ສູ້ກັບເຂົາ, ແລະ ເຂົາຈະອາໄສແຍກອອກຈາກພີ່ນ້ອງທັງຫມົດຂອງເຂົາ."
13ຈາກນັ້ນນາງໄດ້ເອີ້ນນາມນີ້ຕໍ່ພຣະຢາເວຜູ້ທີ່ໄດ້ກ່າວແກ່ນາງວ່າ, "ພຣະອົງຄືພຣະເຈົ້າຜູ້ທີ່ຊົງເຫັນຂ້ານ້ອຍ," ເພາະນາງໄດ້ເວົ້າວ່າ,
"ແມ່ນວ່າຫລັງຈາກທີ່ພຣະອົງໄດ້ຊົງເຫັນຂ້ານ້ອຍຍັງເຫັນໄດ້ແທ້ໆບໍ?"14ດັ່ງນັ້ນນ້ຳສ້າງນັ້ນຈຶ່ງຖືກເອີ້ນຊື່ວ່າ ເບເອວຣາໄຮຣອຍ
ນ້ຳສ້າງຂອງພຣະເຈົ້າຜູ້ເຫັນຂ້ອຍ; ເບິ່ງແມ, ມັນຕັ້ງຢູ່ລະຫວ່າງກາເດັດ ແລະ ເບເຣັດ.
15ນາງຮາກາໄດ້ເກີດລູກຊາຍໃຫ້ແກ່ອັບຣາມ, ແລະ ອັບຣາມໄດ້ຕັ້ງຊື່ລູກຊາຍທີ່ເກີດຈາກນາງຮາກາວ່າດອິຊະມາເອນ.
16ອັບຣາມມີອາຍຸແປດສິບຫົກປີ. ເມື່ອຮາກາໄດ້ເກີດອິຊະມາເອນແກ່ອັບຣາມ.


generated on Tue Jun 17 19:01:42 2025

17 1ເມື່ອອັບຣາມອາຍຸໄດ້ເກົ້າສິບເກົ້າປີ, ພຣະຢາເວໄດ້ຊົງປາກົດແກ່ອັບຣາມ ແລະ ກ່າວກັບເພິ່ນວ່າ, "ເຮົາເປັນພຣະເຈົ້າອົງຊົງຣິດອຳນາດ.
ຈົ່ງດຳເນີນຕໍ່ຫນ້າເຮົາ ແລະ ປະພຶດແຕ່ສິ່ງທີ່ຊອບທັມ.2ຈາກນັ້ນເຮົາຈະຢືນຢັນພັນທະສັນຍາຂອງເຮົາລະຫວ່າງເຮົາກັບເຈົ້າ, ແລະ
ຈະເພີ່ມທະວີໃຫ້ແກ່ເຈົ້າຢ່າງຫລວງຫລາຍ."

3ອັບຣາມກົ້ມໄດ້ຂາບລົງທີ່ພື້ນດິນ ແລະ ພຣະເຈົ້າໄດ້ຊົງບອກກັບເຂົາວ່າ,4"ສຳລັບເຮົານີ້, ຄືພັນທະສັນຍາຂອງເຮົາກັບເຈົ້າ.
ເຈົ້າຈະເປັນບິດາຂອງຊົນຊາດທັງຫລາຍ.5ອັບຣາມ ບໍ່ແມ່ນຊື່ຂອງເຈົ້າອີກຕໍ່ໄປ, ແຕ່ຊື່ຂອງເຈົ້າຈະເປັນອັບຣາຮາມ -
ເພາະວ່າເຮົາຈະໃຫ້ເຈົ້າເປັນບິດາຂອງຫລາຍໆຊົນຊາດ.6ເຮົາຈະເຮັດໃຫ້ເຈົ້າ ທະວີເພີ່ມຂຶ້ນຢ່າງຫລວງຫລາຍ, ແລະ
ເຮົາຈະໃຫ້ຊົນຊາດທັງຫລາຍຂອງເຈົ້າເກີດຂຶ້ນ, ແລະກະສັດຫລາຍພະອົງຈະອອກມາຈາກເຈົ້າ.
7ເຮົາຈະຕັ້ງພັນທະສັນຍາຂອງເຮົາລະຫວ່າງເຮົາ ກັບເຈົ້າ ແລະເຊື້ອສາຍທັງຫລາຍຂອງເຈົ້າ, ທີ່ເກີດມາພາຍຫລັງເຈົ້າ
ຕະຫລອດທຸກຊົ່ວອາຍຸຄົນຂອງພວກເຂົາ, ເປັນພັນທະສັນຍານິຣັນດອນ. ທີ່ຈະເປັນພຣະເຈົ້າຂອງເຈົ້າ ແລະ
ຂອງເຊື້ອສາຍທັງຫລາຍຂອງເຈົ້າທີ່ເກີດມາພາຍຫລັງເຈົ້າ.8ເຮົາຈະມອບດິນແດນທີ່ເຈົ້າອາໄສຢູ່ແກ່ເຈົ້າ, ແລະ
ເຊື້ອສາຍທັງຫລາຍທີ່ເກີດມາພາຍຫລັງເຈົ້າ, ຄືດິນແດນການາອານ, ທັງຫມົດເປັນກຳມະສິດນິຣັນດອນ, ແລະ
ເຮົາຈະເປັນພຣະເຈົ້າຂອງພວກເຂົາ."
9ຈາກນັ້ນພຣະເຈົ້າໄດ້ກ່າວແກ່ອັບຣາຮາມວ່າ, "ສຳລັບເຈົ້າ, ເຈົ້າຕ້ອງຮັກສາພັນທະສັນຍາຂອງເຮົາກັບເຈົ້າ, ແລະ ເຊື້ອສາຍທັງຫລາຍຂອງເຈົ້າ
ທີ່ເກີດມາພາຍຫລັງເຈົ້າ ຕະຫລອດທຸກຊົ່ວອາຍຸຄົນຂອງພວກເຂົາ.10ນີ້ຄືພັນທະສັນຍາຂອງເຮົາທີ່ເຈົ້າຕ້ອງຮັກສາລະຫວ່າງເຮົາກັບເຈົ້າ, ແລະ
ເຊື້ອສາຍທັງຫລາຍ ຂອງເຈົ້າທີ່ເກີດມາພາຍຫລັງເຈົ້າຄື: ຜູ້ຊາຍທຸກຄົນທ່າມກາງເຈົ້າຈະຕ້ອງເຮັດພິທີຕັດ.
11ເຈົ້າຕ້ອງເຮັດພິທີຕັດຫນັງຫຸ້ມປາຍອົງຄະຊາດ, ແລະ ນີ້ຈະເປັນຫມາຍສຳຄັນຂອງພັນທະສັນຍາລະຫວ່າງເຮົາກັບເຈົ້າ.
12ຊາຍທຸກຄົນໃນທ່າມກາງພວກເຈົ້າ ທີ່ໄດ້ແປດວັນຕ້ອງເຮັດພິທີຕັດຕະຫລອດທຸກຊົ່ວອາຍຸຊາຕິພັນຂອງເຈົ້າ.
ນີ້ລວມເຖິງຜູ້ຊາຍທີ່ເກີດໃນຄອບຄົວຂອງເຈົ້າ ແລະ ຜູ້ຊາຍທີ່ຖືກຊື້ມາຈາກຊາວຕ່າງຊາດດ້ວຍເງິນ. ຜູ້ຊື່ງບໍ່ແມ່ນເຊື້ອສາຍທັງຫລາຍຂອງເຈົ້າ.
13ຜູ້ຊາຍຊຶ່ງເກີດໃນຄົວເຮືອນຂອງເຈົ້າ ແລະ ຜູ້ຊາຍທີ່ຖືກຊື້ມາດ້ວຍເງິນຂອງເຈົ້າຕ້ອງເຮັດພິທີຕັດ.
ດັ່ງນັ້ນພັນທະສັນຍາຂອງເຮົາຈະຢູ່ໃນເນື້ອຫນັງຂອງເຈົ້າເປັນພັນທະສັນຍານິຣັນດອນ.
14ຜູ້ຊາຍຄົນໃດທີ່ບໍ່ຍອມເຮັດພິທີຕັດຫນັງຫຸ້ມປາຍອົງຄະຊາດຈະຖືກຕັດອອກຈາກຊົນຊາດຂອງຕົນ
ເພາະເຂົາໄດ້ລະເມີດພັນທະສັນຍາຂອງເຮົາ."
15ພຣະເຈົ້າໄດ້ກ່າວແກ່ອັບຣາຮາມວ່າ, "ສຳລັບນາງຊາຣາຍເມຍຂອງເຈົ້າ, ຢ່າເອີ້ນນາງຊາຣາຍອີກຕໍ່ໄປ. ແຕ່ຊື່ຂອງນາງຈະເປັນຊາຣາ.
16ເຮົາຈະອວຍພອນນາງ, ແລະ ເຮົາຈະໃຫ້ມີລູກຊາຍຄົນຫນຶ່ງຈາກນາງແກ່ເຈົ້າ. ເຮົາຈະອວຍພອນນາງ ແລະ
ນາງຈະເປັນແມ່ຂອງຊົນຊາດທັງຫລາຍ. ກະສັດທັງຫລາຍຂອງປວງຊົນຈະມາຈາກນາງ."
17ຈາກນັ້ນອັບຣາຮາມກົ້ມຂາບລົງຫນ້າຈຳດິນ, ແລະ ຍິ້ມ, ແລະເວົ້າໃນໃຈຂອງເຂົາວ່າ, "ຜູ້ຊາຍທີ່ອາຍຸຫນຶ່ງຮ້ອຍປີແລ້ວຈະມີລູກໄດ້ຈັ່ງໃດ?
ຊາຣາ, ກໍມີອາຍຸເກົ້າສິບປີຈະມີລູກໄດ້ຢູ່ ບໍ?"18ອັບຣາຮາມໄດ້ກ່າວຕໍ່ພຣະເຈົ້າວ່າ, "ໂອຂໍໃຫ້ອິຊະມາເອນມີຊີວິດຢູ່ຕໍ່ພຣະພັກຂອງພຣະອົງ!"
19ແຕ່ພຣະເຈົ້າໄດ້ກ່າວວ່າ, "ບໍ່ແມ່ນແຕ່ຊາຣາເມຍຂອງເຈົ້າຈະເກີດລູກຊາຍໃຫ້ເຈົ້າ, ແລະ ເຈົ້າຕ້ອງຕັ້ງຊື່ເຂົາວ່າອີຊາກ.
ເຮົາຈະຕັ້ງພັນທະສັນຍາຂອງເຮົາກັບເຂົາເປັນພັນທະສັນຍານິຣັນດອນກັບເຊື້ອສາຍຂອງເຂົາທີ່ເກີດພາຍຫລັງເຂົາ.20ສຳລັບອິຊະມາເອນ,
ເຮົາໄດ້ຟັງເຈົ້າ. ເບິ່ງເຖີດ, ເຮົາຈະອວຍພອນເຂົາ, ແລະ ຈະເຮັດໃຫ້ເຂົາມີລູກເພີ່ມຫລາຍຄົນ, ແລະ ຈະທະວີຄູນຢ່າງຫລວງຫລາຍແກ່ເຂົາ.
ເຂົາຈະເປັນພໍ່ຂອງເຈົ້າຊາຍສິບສອງເຜົ່າ, ແລະ ເຮົາຈະເຮັດໃຫ້ເຂົາເປັນຊາດທີ່ຍິ່ງໃຫຍ່.21ແຕ່ພັນທະສັນຍາຂອງເຮົາ ເຮົາຈະຕັ້ງໄວ້ກັບອີຊາກ,
ຜູ້ຊຶ່ງຊາຣາຈະເກີດໃຫ້ແກ່ເຈົ້າເວລານີ້ໃນປີຫນ້າ."
22ເມື່ອພຣະອົງໄດ້ຊົງກ່າວກັບອັບຣາຮາມແລ້ວໆ, ພຣະເຈົ້າໄດ້ໄປຈາກເພິ່ນໄປ.
23ຈາກນັ້ນອັບຣາຮາມກໍເຮັດພິທີຕັດໃຫ້ແກ່ອິຊະມາເອນລູກຊາຍຂອງເພິ່ນ, ແລະ ຄົນເຫລົ່ານັ້ນທັງຫມົດທີ່ເກີດໃນຄົວເຮືອນຂອງເພິ່ນ, ແລະ
ຄົນເຫລົ່ານັ້ນທັງຫມົດທີ່ຖືກຊື້ມາດ້ວຍເງິນຂອງເພິ່ນ, ຜູ້ຊາຍທຸກຄົນທ່າມກາງຜູ້ຊາຍທັງຫລາຍຂອງຄົວເຮືອນຂອງອັບຣາຮາມມາ, ແລະ
ເຂົ້າພິທີຕັດຫນັງຫຸ້ມປາຍອົງຄະຊາດໃນວັນດຽວກັນ, ທີ່ພຣະເຈົ້າໄດ້ເວົ້າແກ່ເພິ່ນ.
24ອັບຣາຮາມອາຍຸໄດ້ເກົ້າສິບເກົ້າປີເມື່ອເພິ່ນເຮັດພິທີຕັດຫນັງຫຸ້ມປາຍອົງຄະຊາດ.
25ອິຊະມາເອນລູກຂອງເພິ່ນອາຍຸໄດ້ສິບສາມປີເມື່ອເຂົາເຂົ້າພິທີຕັດຫນັງຫຸ້ມປາຍອົງຄະຊາດ.26ໃນວັນດຽວກັນນັ້ນທັງອັບຣາຮາມ ແລະ
ອິຊະມາເອນລູກຊາຍຂອງເພິ່ນໄດ້ເຂົ້າພິທີຕັດ.27ຜູ້ຊາຍທັງຫມົດຂອງຄົວເຮືອນຂອງເພິ່ນ,
ໄດ້ເຂົ້າພິທີຕັດກັບເພິ່ນລວມທັງຄົນເຫລົ່ານັ້ນທີ່ຖືກຊື້ມາຈາກຄົນຕ່າງຊາດດ້ວຍເງິນ.

 generated on Tue Jun 17 19:01:42 2025

18 [1]ພຣະຢາເວໄດ້ຊົງປາກົດແກ່ອັບຣາຮາມທີ່ຫມູ່ຕົ້ນໂອກຂອງມຳເຣ, ໃນເວລາອາກາດຮ້ອນຂອງວັນໃນຂະນະທີ່ເພິ່ນນັ່ງຢູ່ທີ່ປະຕູເຕັນ.
[2]ເພິ່ນເງີຍຫນ້າຂຶ້ນ, ເບິ່ງດູ, ເພິ່ນເຫັນຜູ້ຊາຍສາມຄົນກຳລັງຢືນຢູ່ກົງກັນຂວ້າມກັບເພິ່ນ. ເມື່ອເພິ່ນໄດ້ເຫັນພວກເຂົາ,
ເພິ່ນໄດ້ແລ່ນຈາກປະຕູເຕັນໄປຕ້ອນຮັບພວກເຂົາ ແລະ ກົ້ມກາບລົງດິນ.

[3]ເພິ່ນໄດ້ເວົ້າວ່າ, "ນາຍທ່ານ, ຖ້າຂ້ານ້ອຍເປັນທີ່ໂປດປານໃນສາຍຕາຂອງທ່ານ, ຂໍຢ່າໄດ້ຜ່ານໄປ ແລະ ປະຖິ້ມຜູ້ຮັບໃຊ້ພວກທ່ານ.
[4]ຂໍໃຫ້ຂ້ານ້ອຍ, ໄດ້ນຳເອົານ້ຳມາລ້າງຕີນຂອງທ່ານ, ໃຫ້ທ່ານໄດ້ພັກຜ່ອນຢູ່ໃຕ້ຕົ້ນໄມ້.
[5]ໃຫ້ຂ້ານ້ອຍນຳເອົາອາຫານບາງຢ່າງເລັກນ້ອຍມາໃຫ້ທ່ານກິນ, ເພື່ອວ່າທ່ານຈະໄດ້ເຮັດໃຫ້ສົດຊື່ນຂຶ້ນຫລັງຈາກນັ້ນທ່ານຄ່ອຍເດີນທາງຕໍ່ໄປ.
ເພາະທ່ານໄດ້ແວ່ມາຢ້ຽມຢາມຜູ້ຮັບໃຊ້ຂອງທ່ານ." ພວກເຂົາຕອບວ່າ, "ຈົ່ງເຮັດຕາມທີ່ເຈົ້າເວົ້າເຖີດ."
[6]ແລ້ວອັບຣາຮາມຈຶ່ງຟ້າວເຂົ້າໄປຫາຊາຣາ, ແລະ ເວົ້າວ່າ, "ໄວໆ, ຮີບໄປເອົາແປ້ງຢ່າງດີສາມຖັງນວດ, ແລະ
ເຮັດເຂົ້າຈີ່."[7]ຈາກນັ້ນອັບຣາຮາມຟ້າວແລ່ນໄປຫາຝູງສັດ, ແລະ ນຳເອົາລູກງົວທີ່ຍັງອ່ອນທີ່ຕູ້ຍພີດີ, ມາໃຫ້ຄົນຮັບໃຊ້, ແລະ
ເຂົາໄດ້ຮີບທີ່ຈະຈັດແຈ່ງເຮັດເປັນອາຫານ.[8]ເຂົາໄດ້ເອົາເນີຍ, ແລະ ນ້ຳນົມ ແລະ ຊີ້ນງົວທີ່ໄດ້ຈັດທຳໄວ້ແລ້ວ
ແລະວາງອາຫານນັ້ນໄວ້ຕໍ່ຫນ້າພວກເຂົາ. ແລະ ເຂົາໄດ້ຢືນຢູ່ຂ້າງພວກເພິ່ນໃຕ້ຕົ້ນໄມ້ໃນຂະນະທີ່ພວກເຂົາກິນອາຫານ.
[9]ພວກເຂົາໄດ້ເວົ້າກັບເພິ່ນວ່າ, "ຊາຣາ ເມຍຂອງເຈົ້າຢູ່ໃສ?" ເພິ່ນຕອບວ່າ, "ນາງຢູ່ໃນຜ້າເຕັນ."[10]ເຂົາໄດ້ເວົ້າວ່າ, "ແນ່ນອນແທ້
ເຮົາຈະກັບມາຫາເຈົ້າໃນລະດູໃບໄມ້ປົ່ງ, ແລະ ເບິ່ງເຖີດ, ຊາຣາເມຍຂອາເຈົ້າຈະມີລູກຊາຍ." ຊາຣາຢືນຟັງຢູ່ໃກ້ປະຕູເຂົ້າເຕັນຂ້າງຫລັງເພິ່ນ.
[11]ຂະນະນັ້ນອັບຣາຮາມ ແລະຊາຣາຕ່າງກໍມີອາຍຸຫລາຍແລ້ວ, ແລະຊາຣາກໍມີອາຍຸຫລາຍເກີນກວ່າທີ່ຈະມີລູກໄດ້.
[12]ດັ່ງນັ້ນຊາຣາຈຶ່ງຫົວຂວັນໃຫ້ກັບຕົນເອງ ແລະເວົ້າກັບຕົນເອງວ່າ, "ຫລັງຈາກທີ່ຂ້ອຍຫມົດແຮງແລ້ວ ແລະເຈົ້ານາຍຂອງຂ້ອຍກໍແກ່ແລ້ວ,
ຂ້ອຍຍັງຈະມີຄວາມຍິນດີໃນເລື່ອງນີ້ອີກບໍ?"
[13]ພຣະຢາເວກໍຖາມອັບຣາຮາມວ່າ, "ເປັນຫຍັງຊາຣາຈຶ່ງຫົວຂວັນ ແລະ ເວົ້າວ່າ, "ຂ້ອຍຈະມີລູກຄົນຫນຶ່ງແທ້ໆບໍ, ໃນເມື່ອຂ້ອຍແກ່ແລ້ວ"?
[14]ມີຫຍັງແດ່ຍາກເກີນໄປສຳລັບພຣະຢາເວບໍ? ໃນເວລາທີ່ເຮົາໄດ້ກຳນົດໃນລະດູໃບໄມ້ປົ່ງ, ເຮົາຈະກັບມາຫາເຈົ້າ.
ປະມານເວລານີ້ໃນປີຫນ້າຊາຣາຈະມີລູກຊາຍຜູ້ຫນຶ່ງ."[15]ຊາຣາໄດ້ປະຕິເສດ ແລະ ເວົ້າວ່າ, "ຂ້ານ້ອຍບໍ່ໄດ້ຫົວຂວັນ." ເພາະນາງຢ້ານກົວ.
ພຣະອົງຕອບວ່າ, "ບໍ່ແມ່ນເຈົ້າໄດ້ຫົວຂວັນ."
[16]ຈາກນັ້ນພວກຜູ້ຊາຍໄດ້ລຸກຂຶ້ນເພື່ອທີ່ຈະຈາກໄປ ແລະ ຫລຽວລົງໄປທີ່ເມືອງໂຊໂດມ. ອັບຣາຮາມໄປກັບພວກເຂົາ.[17]ແຕ່ພຣະຢາເວໄດ້ກ່າວວ່າ,
"ຄວນບໍ່ທີ່ເຮົາຈະປິດບັງອັບຣາຮາມໃນສິ່ງທີ່ເຮົາຈະເຮັດນີ້.[18]ເພາະວ່າອັບຣາຮາມຈິງໆແລ້ວຈະເປັນຊົນຊາດທີ່ຍິ່ງໃຫຍ່ທັງປວງ ແລະ
ມີອຳນາດຫລາຍ ແລະ ຊົນຊາດທັງປວງຂອງແຜ່ນດິນຈະໄດ້ຮັບພອນເພາະເຂົາ.
[19]ເພາະວ່າເຮົາໄດ້ເລືອກເອົາລາວດັ່ງນັ້ນລາວຈະສັ່ງສອນລູກໆທັງຫລາຍຂອງລາວ ແລະ
ຄົວເຮືອນຂອງລາວທີ່ຈະມາພາຍຫລັງລາວໃຫ້ຖືຮັກສາທາງຂອງພຣະຢາເວ, ເພື່ອກະທຳຄວາມຊອບທັມ ແລະຍຸຕິທັມ,
ດັ່ງນັ້ນພຣະຢາເວຈະໄດ້ປະທານໃຫ້ແກ່ອັບຣາຮາມ ຕາມທີ່ພຣະອົງໄດ້ກ່າວກັບລາວແລ້ວນັ້ນ."
[20]ຈາກນັ້ນພຣະຢາເວກໍບອກວ່າເພາະວ່າ, "ມີສຽງຮຽກຮ້ອງກ່າວໂທດເມືອງໂຊໂດມ ແລະເມືອງໂກໂມຣາຢ່າງຫນັກຫນ່ວງ,
ແລະເພາະວ່າຄວາມບາບຂອງຊາວເມືອງນັ້ນຮ້າຍແຮງ,[21]ບັດນີ້ເຮົາຈະລົງໄປທີ່ນັ້ນ
ແລະເບິ່ງຕາມສຽງຮຽກຮ້ອງກ່າວໂທດເມືອງນັ້ນທີ່ມາເຖິງເຮົາ, ເບິ່ງວ່າພວກເຂົາໄດ້ເຮັດບາບຢ່າງນັ້ນ. ເປັນຄວາມຈິງ, ຫລືບໍ່ເຮົາກໍຈະຮູ້."
[22]ດັ່ງນັ້ນພວກຜູ້ຊາຍໄດ້ໄປຈາກທີ່ນັ້ນ, ແລະມຸ່ງຫນ້າໄປສູ່ເມືອງໂຊໂດມ, ແຕ່ພຣະຢາເວຍັງຢູ່ກັບອັບຣາຮາມ.[23]ຈາກນັ້ນອັບຣາຮາມໄດ້ເຂົ້າມາໃກ້
ແລະທູນຖາມວ່າ, "ພຣະອົງຈະຊົງທຳລາຍລ້າງຄົນຊອບທັມພ້ອມກັບຄົນອະທັມບໍ?
[24]ບາງທີອາດຈະມີຄົນຊອບທັມຫ້າສິບຄົນຢູ່ໃນເມືອງນັ້ນ. ພຣະອົງຈະຊົງທຳລາຍເມືອງນັ້ນ
ແລະຈະບໍ່ລະເວັ້ນເມືອງນັ້ນເພາະຄົນຊອບທັມຫ້າສິບຄົນທີ່ຢູ່ທີ່ນັ້ນບໍ?[25]ຂໍໃຫ້ມັນຢູ່ຫ່າງໄກຈາກພຣະອົງ, ທີ່ຈະຊົງກະທຳສິ່ງນັ້ນ,
ຄືການຂ້າຄົນຊອບທັມພ້ອມກັບຄົນອະທັມດັ່ງນັ້ນຄວນບໍ ທີ່ຄົນຊອບທັມຈະຖືກລົງໂທດແບບດຽວກັນກັບຄົນອະທັມ.
ຂໍໃຫ້ມັນຢູ່ຫ່າງໄກຈາກພຣະອົງເຖີດ! ຜູ້ພິພາກສາຂອງແຜ່ນດິນທັງຫມົດຈະບໍ່ເຮັດສິ່ງໃດທີ່ຍຸຕິທັມບໍ?."[26]ພຣະຢາເວໄດ້ຕອບວ່າ,
"ຖ້າເຮົາພົບຄົນຊອບທັມຫ້າສິບຄົນທີ່ເມືອງ ໂຊໂດມເຮົາຈະລະເວັ້ນເມືອງນັ້ນທັງເມືອງ, ເພາະເຫັນແກ່ພວກເຂົາ."
[27]ຂ້ານ້ອຍຂໍພຣະກາຣຸນາທີ່ຈະທູນຕໍ່ອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍແມ່ນວ່າຂ້ານ້ອຍຈະເປັນພຽງຂີ້ຝຸ່ນ ແລະ ຂີ້ເຖົ່າວ່າ!
[28]ຖ້າຫາກມີຄົນຊອບທັມຫນ້ອຍກວ່າຫ້າສິບຄົນໄປຫ້າຄົນ ພຣະອົງຈະຊົງທຳລາຍເມືອງທັງເມືອງເພາະຂາດໄປຫ້າຄົນນັ້ນບໍ?"
ພຣະອົງຕອບວ່າ,"ເຮົາຈະບໍ່ທຳລາຍເມືອງນັ້ນ, ຖ້າພົບຄົນຊອບທັມສີ່ສິບຫ້າຄົນທີ່ນັ້ນ."
[29]ເພິ່ນໄດ້ເວົ້າກັບພຣະອົງອີກວ່າ, ແລະໄດ້ທູນວ່າ, "ແລະຖ້າພົບພຽງສີ່ສິບຄົນເທົ່ານັ້ນເດ." ພຣະອົງໄດ້ກ່າວຕອບວ່າ,"ເຮົາກໍຈະບໍ່ທຳລາຍ
ເມືອງນັ້ນເພາະເຫັນແກ່ສີ່ສິບຄົນນັ້ນ."[30]ເພິ່ນໄດ້ທູນວ່າ," ອົງພຣະຜູ້ເປັນເຈົ້າຂໍພຣະກາຣຸນາຢ່າຊົງໂກດຮ້າຍເລີຍ,
ຂ້ານ້ອຍຂໍຖາມອີກວ່າບາງເທື່ອອາດຈະພົບສາມສິບຄົນທີ່ນັ້ນ." ພຣະອົງຕອບວ່າ,"ເຮົາຈະບໍ່ທຳລາຍເມືອງນັ້ນ
ຖ້າເຮົາພົບສາມສິບຄົນທີ່ນັ້ນ."[31]ເຂົາໄດ້ທູນຖາມວ່າ, "ເບິ່ງເຖີດຂ້ານ້ອຍຂໍອົງພຣະຜູ້ເປັນເຈົ້າ
ຂໍພຣະອົງໂຜດຍົກໂທດໃຫ້ຂ້ານ້ອຍທີ່ຈະທູນຕໍ່ອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍ. "ຖ້າວ່າມີພຽງຊາວຄົນທີ່ນັ້ນ"
ພຣະອົງຕອບວ່າ,"ເຮົາຈະບໍ່ທຳລາຍເມືອງນັ້ນ ເພາະເຫັນແກ່ຊາວຄົນນັ້ນ."
[32]ເພິ່ນໄດ້ທູນວ່າ, "ອົງພຣະຜູ້ເປັນເຈົ້າຂໍ ພຣະກາຣຸນາຢ່າຟ້າວໂກດຮ້າຍເລີຍ, ຂ້ານ້ອຍຂໍຖາມພຣະອົງອີກຄັ້ງນີ້ເປັນຄັ້ງສຸດທ້າຍ.
ບາງທີອາດຈະພົບສິບຄົນທີ່ນັ້ນ ພຣະອົງໄດ້ຕອບວ່າ," ເຮົາຈະບໍ່ທຳລາຍເມືອງນັ້ນ
ເພາະເຫັນແກ່ສິບຄົນນັ້ນ."[33]ພຣະຢາເວໄດ້ສະເດັດໄປທັນທີທີ່ເມື່ອພຣະອົງສິ້ນສຸດການສົນທະນາກັບອັບຣາຮາມ, ແລະ
ອັບຣາຮາມກໍໄດ້ກັບຄືນໄປສູ່ ທີ່ພັກ.

19 [1]ທູດສະຫວັນສອງຕົນໄດ້ມາເຖິງເມືອງ ໂຊໂດມໃນຕອນຄໍ່າ, ຂະນະທີ່ໂລດກໍາລັງນັ່ງຢູ່ທີ່ປະຕູເມືອງໂຊໂດມ. ໂລດໄດ້ເຫັນພວກເຂົາ,
ຈຶ່ງໄດ້ລຸກຂຶ້ນອອກໄປຕ້ອນຮັບພວກເຂົາ, ແລະ ໄດ້ໂນ້ມຕົວລົງຫນ້າຈຸພື້ນດິນ.[2]ເຂົາໄດ້ເວົ້າວ່າ, "ກະຣຸນາເທາະເຈົ້ານາຍຂອງຂ້ານ້ອຍເອີຍ,
ຂ້ານ້ອຍຂໍເຊີນທ່ານແວ່ເຂົ້າໄປໃນບ້ານຜູ້ຮັບໃຊ້ຂອງທ່ານພັກຄ້າງຄືນ, ແລະ ລ້າງຕີນຂອງທ່ານ. ຈາກນັ້ນທ່ານສາມາດຕື່ນຂຶ້ນແຕ່ເຊົ້າ ແລະ
ເດີນທາງໄປຕໍ່." ແຕ່ພວກເພິ່ນຕອບວ່າ, "ບໍ່ດອກເຮົາຈະພັກຄ້າງຄືນທີ່ສີ່ແຍກຂອງເມືອງ."[3]ແຕ່ເຂົາພະຍາຍາມສືບຕໍ່ຂໍຮ້ອງຫລາຍຂຶ້ນ,
ດັ່ງນັ້ນພວກເພິ່ນຈຶ່ງໄປກັບເຂົາ, ແລະ ເຂົ້າໄປໃນທີ່ບ້ານຂອງໂລດ. ເຂົາໄດ້ຈັດແຈ່ງເຂົ້າປາອາຫານ ແລະ ປີ້ງເຂົ້າຈີ່ບໍ່ມີເຊື້ອແປ້ງ,
ແລະພວກເພິ່ນກໍພາກັນຮັບກິນ.

[4]ແຕ່ກ່ອນທີ່ພວກເຂົາຈະນອນລົງ, ພວກຜູ້ຊາຍຂອງເມືອງນັ້ນ, ພວກຜູ້ຊາຍຂອງເມືອງໂຊໂດມ, ໄດ້ມາອ້ອມບ້ານນັ້ນໄວ້, ທັງຄົນຫນຸ່ມ
ແລະຄົນແກ່ຜູ້ຊາຍທັງຫມົດ, ຈາກທຸກຊອກທຸກບ່ອນຂອງເມືອງນັ້ນ.[5]ພວກເຂົາຮ້ອງຫາໂລດ, ແລະ ໄດ້ເວົ້າກັບເຂົາວ່າ,
"ຜູ້ຊາຍທີ່ໄດ້ເຂົ້າມາຫາເຈົ້າຄືນນີ້ຢູ່ໃສ? ຈົ່ງນໍາພວກເຂົາອອກມາໃຫ້ພວກເຮົາ, ພວກເຮົາຈະຫລັບນອນກັບພວກເຂົາ."
[6]ໂລດຈຶ່ງໄດ້ອອກໄປນອກປະຕູໄປຫາພວກເຂົາ ແລະ ໄດ້ປິດປະຕູຫລັງຈາກທີ່ເຂົາອອກໄປແລ້ວ.[7]ເຂົາໄດ້ເວົ້າວ່າ, "ເຮົາຂໍຮ້ອງພວກທ່ານ,
ພີ່ນ້ອງຂອງເຮົາຢ່າເຮັດເລື່ອງຊົ່ວຊ້າຢ່າງນັ້ນເລີຍ.[8]ເບິ່ງເຖີດ, ເຮົາມີລູກສາວສອງຄົນຜູ້ທີ່ຍັງບໍ່ເຄີຍຫລັບນອນກັບຜູ້ຊາຍຄົນໃດມາກ່ອນ.
ເຮົາຂໍຮ້ອງທ່ານ, ເຮົາຈະນໍາພວກເຂົາອອກມາໃຫ້ພວກທ່ານຈະເຮັດສິ່ງໃດກັບພວກເຂົາກໍແລ້ວແຕ່ພວກທ່ານ.
ພຽງແຕ່ຢ່າເຮັດສິ່ງໃດກັບຜູ້ຊາຍເຫລົ່ານີ້, ເພາະວ່າພວກເພິ່ນເປັນແຂກໄດ້ມາຢູ່ໃຕ້ຮົ່ມເງົາຫລັງຄາບ້ານຂອງເຮົາ."
[9]ພວກເຂົາຕອບວ່າ, "ຈົ່ງຖອຍໄປ!" ພວກເຂົາເວົ້າອີກດ້ວຍວ່າ, "ຄົນນີ້ມາທີ່ນີ້ເພື່ອຈະອາໄສຢູ່ທີ່ນີ້ເຫມືອນຄົນຕ່າງຊາດຄົນຫນຶ່ງ,
ແຕ່ບັດນີ້ເຂົາໄດ້ກາຍເປັນຜູ້ພິພາກສາເຮົາ! ບັດນີ້ພວກເຮົາຈະຈັດການຢ່າງຊົ່ວຮ້າຍກັບໂຕເຈົ້າຫນັກກວ່າເຮັດກັບພວກເຂົາ."
ພວກເຂົາໄດ້ຊຸກຜູ້ຊາຍຄົນນັ້ນ, ຢ່າງແຮງຄືສູ້ກັບໂລດ, ແລະ ເຂົ້າມາໃກ້ເພື່ອທີ່ຈະທຸບປະຕູບ້ານລົງ.
[10]ແຕ່ພວກຜູ້ຊາຍນັ້ນໄດ້ຍື່ນມືອອກໄປດຶງເອົາໂລດເຂົ້າມາໃນບ້ານ ແລະ ອັດປະຕູໄວ້.
[11]ຈາກນັ້ນພວກແຂກຂອງໂລດໄດ້ຈູ່ໂຈມຢ່າງທີ່ບໍ່ສາມາດຫລຽວເຫັນໄດ້ຕໍ່ພວກຜູ້ຊາຍທີ່ຢູ່ນອກປະຕູບ້ານທັງຄົນຫນຸ່ມ,
ແລະຄົນແກ່ດັ່ງນັ້ນພວກເຂົາຈຶ່ງອ່ອນແຮງລົງ. ເມື່ອພວກເຂົາໄດ້ພະຍາຍາມເຂົ້າມາທີ່ປະຕູບ້ານ.
[12]ແລ້ວພວກຜູ້ຊາຍນັ້ນໄດ້ບອກກັບໂລດວ່າ, "ເຈົ້າມີໃຜທີ່ຢູ່ທີ່ນີ້ອີກບໍ? ລູກຊາຍ ແລະ ລູກສາວທັງຫລາຍ, ລູກເຂີຍທັງຫລາຍ ແລະ
ໃຜກໍຕາມທີ່ເຈົ້າມີໃນເມືອງນີ້, ຈົ່ງພາພວກເຂົາອອກຈາກເມືອງນີ້.[13]ເພາະວ່າເຮົາຈະທໍາລາຍສະຖານທີ່ນີ້,
ເພາະວ່າການຮຽກຮ້ອງກ່າວຫາເລື່ອງນີ້ດັງໄປເຖິງພຣະພັກພຣະຢາເວ ດັ່ງນັ້ນພຣະອົງຈຶ່ງຊົງໃຊ້ພວກເຮົາມາທໍາລາຍເມືອງນີ້."
[14]ໂລດໄດ້ອອກໄປເວົ້າກັບຄູ່ຫມັ້ນຂອງລູກສາວເຂົາ, ພວກຜູ້ຊາຍທີ່ໄດ້ສັນຍາວ່າຈະແຕ່ງງານກັບລູກສາວທັງຫລາຍຂອງຕົນວ່າ,
"ຈົ່ງຫນີອອກຈາກເມືອງນີ້ໄວໆ, ເພາະພຣະຢາເວກໍາລັງຈະຊົງທໍາລາຍເມືອງນີ້." ແຕ່ພວກເຂົາລູກເຂີຍຂອງເຂົາ ເຂົາຄິດວ່າເວົ້າຫລິ້ນ.
[15]ເມື່ອໃກ້ຈະຮຸ່ງເຊົ້າເຫລົ່າທູດສະຫວັນ, ໄດ້ເລັ່ງໂລດກ່າວວ່າ, "ຈົ່ງໄປເຖີດ, ນໍາເອົາເມຍຂອງເຈົ້າກັບລູກສາວສອງຄົນທີ່ຢູ່ທີ່ນີ້,
ເພື່ອທີ່ຈະບໍ່ຖືກທໍາລາຍໄປກັບການລົງໂທດເມືອງນີ້."
[16]ແຕ່ຍັງສົງໄສພວກຜູ້ຊາຍນັ້ນຈຶ່ງດຶງມືລາວ, ແລະ ມືຂອງເມຍ, ແລະ ມືລູກສາວທັງສອງຂອງເຂົາເພາະວ່າພຣະຢາເວຊົງພຣະກາຣຸນາຕໍ່ລາວ.
ພວກເຂົາໄດ້ນໍາເອົາພວກເພິ່ນອອກໄປນອກເມືອງ.[17]ເມື່ອພວກເຂົາໄດ້ເຂົາທັງຫລາຍອອກມາ, ຜູ້ຊາຍຄົນຫນຶ່ງໄດ້ເວົ້າວ່າ,
"ຈົ່ງຟ້າວຫນີໄປເພື່ອເອົາຊີວິດລອດ! ຢ່າຫລຽວຄືນຫລັງ, ຫລືຢຸດພັກທີ່ໃດໃນທີ່ຮາບນັ້ນ.
ຈົ່ງຫນີໄປເທິງພູເຂົາທັງຫລາຍເພື່ອທີ່ພວກເຈົ້າຈະບໍ່ຖືກກວດລ້າງ."
[18]ໂລດໄດ້ເວົ້າກັບພວກເຂົາວ່າ, "ຢ່າເລີຍກາຣຸນາເທາະ![19]ເຈົ້ານາຍຂອງຂ້ານ້ອຍຜູ້ຮັບໃຊ້ຂອງທ່ານ,
ໄດ້ເປັນທີ່ໂປດປານໃນສາຍຕາຂອງທ່ານແລ້ວ, ແລະ ທ່ານໄດ້ສໍາແດງຄວາມເມດຕາທີ່ຍິ່ງໃຫຍ່ແກ່ຂ້ານ້ອຍໃນການຊ່ວຍຊີວິດຂອງຂ້ານ້ອຍ,
ແຕ່ຂ້ານ້ອຍບໍ່ສາມາດຫນີໄປຍັງພູເຂົາທັງຫລາຍໄດ້ທັນເພາະພັຍພິບັດຈະເຖິງຂ້ານ້ອຍເສຍກ່ອນ, ແລະ ຂ້ານ້ອຍຈະຕາຍ.[20]ເບິ່ງເຖີດ,
ເມືອງນັ້ນຢູ່ທີ່ນັ້ນຢູ່ໃກ້ພໍທີ່ຈະຫນີໄປທີ່ນັ້ນ, ແລະ ເປັນເມືອງນ້ອຍໆ. ກາຣຸນາ, ອະນຸຍາດໃຫ້ຂ້ານ້ອຍຫນີໄປທີ່ນັ້ນສາ. (ບໍ່ແມ່ນເມືອງນ້ອຍໆບໍ?),
ແລະ ຊີວິດຂອງຂ້ານ້ອຍຈະປອດພັຍ."
[21]ເຂົາໄດ້ເວົ້າກັບທ່ານວ່າ, "ຕົກລົງ, ເຮົາຍອມຮັບຄໍາຮ້ອງຂໍນີ້ດ້ວຍ, ທີ່ເຮົາຈະບໍ່ທໍາລາຍເມືອງທີ່ເຈົ້າໄດ້ກ່າວເຖິງນັ້ນ.[22]ຮີບໄວໆເຖີດ!
ຈົ່ງຫນີໄປທີ່ນັ້ນ, ເພາະເຮົາຈະບໍ່ສາມາດເຮັດອັນໃດໄດ້ ຈົນກວ່າເຈົ້າຈະໄປເຖິງທີ່ນັ້ນ." ສະນັ້ນເມືອງນີ້ຈຶ່ງຖືກເອີ້ນຊື່ວ່າໂຊອາ.
[23]ເມື່ອໂລດໄປເຖິງເມືອງໂຊອາ ຕາເວັນກໍກໍາລັງຂຶ້ນ.[24]ຈາກນັ້ນ ພຣະຢາເວຊົງໄດ້ສົ່ງໃຫ້ໄຟ ແລະ ມາດມາຈາກທ້ອງຟ້າລົງມາເຫນືອເມືອງໂຊໂດມ
ແລະ ໂກໂມຣາ.[25]ພຣະອົງໄດ້ຊົງທໍາລາຍເມືອງເຫລົ່ານັ້ນ, ແລະ ທີ່ຮາບທັງໝົດ, ແລະ ຜູ້ທີ່ຢູ່ໃນເມືອງເຫລົ່ານັ້ນທັງຫມົດ ແລະ
ພືດພັນຕ່າງໆທີ່ເຕີບໂຕຈາກພື້ນດິນ.
[26]ແຕ່ເມຍຂອງໂລດ, ທີ່ຢູ່ຂ້າງຫລັງໄດ້ຫລຽວຄືນຫລັງ, ແລະ ນາງໄດ້ກາຍເປັນເສົາເກືອ.[27]ອັບຣາຮາມໄດ້ລຸກຂຶ້ນແຕ່ເຊົ້າໆ ແລະ
ໄດ້ໄປບ່ອນທີ່ເພິ່ນໄດ້ຢືນຢູ່ຕໍ່ພຣະພັກພຣະຢາເວ.[28]ເພິ່ນໄດ້ຫລຽວລົງໄປເບິ່ງເມືອງໂຊໂດມ ແລະ ເມືອງໂກໂມຣາ
ແລະແຜ່ນດິນທີ່ຮາບນັ້ນທັງຫມົດ. ເພິ່ນໄດ້ຫລຽວເບິ່ງເຫັນຄວັນພຸ່ງຂຶ້ນມາຈາກແຜ່ນດິນ, ເຫມືອນຄວັນຂອງເຕົາເຜົາ.
[29]ດັ່ງນັ້ນເມື່ອພຣະເຈົ້າຊົງໄດ້ທໍາລາຍເມືອງທັງຫລາຍຂອງທີ່ຮາບ, ພຣະເຈົ້າຊົງໄດ້ລະນຶກເຖິງອັບຣາຮາມ.
ພຣະອົງຊົງໄດ້ສົ່ງໂລດອອກໄປພົ້ນຈາກການທໍາລາຍລ້າງເມື່ອພຣະອົງຊົງໄດ້ທໍາລາຍເມືອງທັງຫລາຍທີ່ໂລດອາໄສຢູ່.
[30]ໂລດຈຶ່ງໄດ້ອອກໄປຈາກເມືອງໂຊອາ ໄປອາໄສຢູ່ເທິງພູເຂົາກັບລູກສາວທັງສອງ, ເພາະເຂົາຢ້ານກົວທີ່ຈະອາໄສຢູ່ທີ່ເມືອງໂຊອາ.
ເຫດນີ້ເຂົາຈຶ່ງໄດ້ໄປອາໄສຢູ່ໃນຖ້ໍາ, ເຂົາ ແລະ ລູກສາວທັງສອງຄົນ.
[31]ລູກສາວຜູ້ເອື້ອຍໄດ້ເວົ້າກັບນ້ອງສາວວ່າ, "ພໍ່ຂອງພວກເຮົາອາຍຸຫລາຍແລ້ວ, ແລະ
ບໍ່ມີຜູ້ຊາຍຄົນໃດທີ່ຈະມາຫລັບນອນກັບເຮົາຕາມທໍານຽມປະເພນີຂອງໂລກ.[32]ມາເທາະ, ໃຫ້ເຮົາຊັກຊວນພໍ່ດື່ມເຫລົ້າອະງຸ່ນຈົນເມົາ, ແລະ
ເຮົາຈະໄດ້ນອນນໍາເພິ່ນ, ເພື່ອທີ່ຈະຂະຫຍາຍເຊື້ອສາຍຂອງພໍ່ເຮົາ."[33]ດັ່ງນັ້ນ ພວກເຂົາຈຶ່ງໃຫ້ພໍ່ຂອງພວກເຂົາດື່ມເຫລົ້າອະງຸ່ນໃນຄືນນັ້ນ.
ຈາກນັ້ນ ລູກສາວກົກໄດ້ເຂົ້າໄປນອນນໍາພໍ່ຂອງຕົນ, ເຂົາບໍ່ຮູ້ວ່ານາງໄດ້ເຂົ້າມານອນເມື່ອໃດ, ຫລື ນາງໄດ້ລຸກອອກໄປເມື່ອໃດ.


generated on Tue Jun 17 19:01:42 2025

34ມື້ຕໍ່ມາຜູ້ເອື້ອຍໄດ້ເວົ້າກັບນ້ອງສາວວ່າ, "ຈົ່ງຟັງ, ມື້ຄືນນີ້ຂ້ອຍໄດ້ນອນນໍາພໍ່ແລ້ວ. ໃຫ້ເຮົາຊັກຊວນເພິ່ນດື່ມເຫລົ້າອະງຸ່ນອີກຄືນມື້ນີ້, ແລະ
ເຈົ້າຄວນເຂົ້າໄປ ແລະ ນອນນໍາເພິ່ນ, ດັ່ງນັ້ນພວກເຮົາຈະຂະຫຍາຍເຊື້ອສາຍຂອງພໍ່." 35ດັ່ງນັ້ນ
ພວກເຂົາຈຶ່ງໃຫ້ພໍ່ຂອງພວກເຂົາດື່ມເຫລົ້າອະງຸ່ນໃນຄືນນັ້ນດ້ວຍ, ແລະ ລູກສາວຄົນນ້ອງ ກໍໄດ້ເຂົ້າໄປນອນນໍາພໍ່ຂອງຕົນ.
ເພິ່ນບໍ່ຮູ້ວ່ານາງໄດ້ເຂົ້າມານອນເມື່ອໃດ, ຫລື ນາງໄດ້ລຸກໄປເມື່ອໃດ.
36ນີ້ແຫລະ ລູກສາວທັງສອງຂອງໂລດ ຈຶ່ງພາກັນຕັ້ງທ້ອງໂດຍພໍ່ຂອງພວກເຂົາ. 37ຜູ້ເປັນເອື້ອຍໄດ້ລູກຊາຍຄົນຫນຶ່ງ, ແລະໄດ້ຕັ້ງຊື່ ເຂົາວ່າໂມອາບ.
ລາວໄດ້ເປັນບັນພະບຸຣຸດຂອງຊາວໂມອາບຈົນເຖິງທຸກວັນນີ້. 38ສໍາລັບລູກສາວຄົນນ້ອງນາງກໍໄດ້ລູກຊາຍຜູ້ຫນຶ່ງ, ແລະໄດ້ຕັ້ງຊື່ເຂົາວ່າ ເບນນໍາມີ.
ລາວໄດ້ເປັນ ບັນພະບຸຣຸດ ຂອງຊາວອໍາໂມນມາຈົນເຖິງ ທຸກວັນນີ້.


generated on Tue Jun 17 19:01:42 2025

# 20

[1]ອັບຣາຮາມໄດ້ເດີນທາງຈາກທີ່ນັ້ນໄປຍັງແຜ່ນດິນເນເກບ, ແລະ ໄດ້ອາໄສຢູ່ລະຫວ່າງເມືອງກາເດັດ ກັບເມືອງຊູເຣ.
ເຂົາໄດ້ເປັນຄົນຕ່າງຊາດອາໄສຢູ່ທີ່ເມືອງເກຣາກ.[2]ອັບຣາຮາມໄດ້ເວົ້າກຽວກັບຊາຣາເມຍຂອງຕົນວ່າ, "ນາງເປັນນ້ອງສາວ."
ດັ່ງນັ້ນເຈົ້າອາບີເມເຫລັກ ກະສັດເມືອງ ເກຣາກ ຊົງໄດ້ສົ່ງຜູ້ຊາຍຂອງພະອົງມາ ແລະ ພວກເຂົາໄດ້ນຳຊາຣາໄປ.
[3]ແຕ່ພຣະເຈົ້າຊົງໄດ້ສະເດັດມາຫາອາບີເມເຫລັກໃນຄວາມຝັນໃນຄືນນັ້ນ, ແລະ ໄດ້ກ່າວກັບເຂົາວ່າ, "ເບິ່ງເຖີດ,
ເຈົ້າເປັນຜູ້ຊາຍທີ່ຕາຍແລ້ວເພາະຜູ້ຍິງ, ຜູ້ທີ່ເຈົ້າໄດ້ເອົາມານັ້ນນາງມີຜົວແລ້ວ."

[4]ຂະນະນັ້ນອາບີເມເຫລັກຍັງບໍ່ໄດ້ເຂົ້າໃກ້ນາງ ແລະ ພະອົງຈຶ່ງທູນວ່າ, "ຂ້າແດ່ອົງພຣະຜູ້ເປັນເຈົ້າ,
ພຣະອົງຈະຊົງປະຫານປະຊາຊົນທີ່ບໍ່ມີຄວາມຜິດບໍ?[5]ເຂົາເອງບໍ່ແມ່ນບໍທີ່ບອກກັບຂ້ານ້ອຍວ່າ, 'ນາງເປັນນ້ອງສາວຂອງລາວ. ແລະ
ຕົວນາງເອງກໍໄດ້ເວົ້າວ່າເຂົາຄືອ້າຍຂອງລາວ.' ຂ້ານ້ອຍໄດ້ເຮັດສິ່ງນີ້ດ້ວຍຄວາມບໍຣິສຸດໃຈຂອງຂ້ານ້ອຍ ແລະ ມືບໍ່ໄດ້ເຮັດຜິດຫຍັງເລີຍ."
[6]ພຣະເຈົ້າຈຶ່ງໄດ້ຕອບແກ່ເພິ່ນທາງຄວາມຝັນວ່າ, "ຖືກຕ້ອງ, ເຮົາຮູ້ດີວ່າເຈົ້າໄດ້ເຮັດສິ່ງນີ້ດ້ວຍ ຄວາມຊື່ສັດຈາກໃຈຂອງເຈົ້າ,
ເຮົາຈຶ່ງໄດ້ປ້ອງກັນເຈົ້າຈາກການເຮັດບາບຕໍ່ຕ້ານເຮົາດ້ວຍ. ດັ່ງນັ້ນເຮົາ ຈຶ່ງບໍ່ໄດ້ອະນຸຍາດໃຫ້ເຈົ້າແຕະຕ້ອງນາງ.[7]ດັ່ງນັ້ນຈົ່ງຄືນເມຍຂອງລາວໄປ,
ເພາະວ່າເຂົາເປັນຜູ້ທຳນວາຍ, ແລະ ລາວຈະອະທິຖານສຳລັບເຈົ້າ, ເພື່ອເຈົ້າຈະມີຊີວິດຢູ່ຕໍ່ໄປ, ແຕ່ຖ້າເຈົ້າບໍ່ຄືນນາງໄປ, ຈົ່ງຮູ້ເຖີດວ່າເຈົ້າ ແລະ
ປະຊາຊົນທັງຫມົດ ທີ່ເປັນຂອງເຈົ້າຈະຕ້ອງຕາຍຢ່າງແນ່ນອນ."
[8]ອາບີເມເຫລັກຕື່ນນອນແຕ່ເຊົ້າໆ ແລະ ຊົງໄດ້ເອີ້ນຂ້າຣາຊການທັງຫມົດ. ຂອງຕົນເຂົ້າມາຫາ ແລະ
ຊົງໄດ້ບອກເຖິງສິ່ງເລົ່ານີ້ທັງຫມົດແກ່ພວກເຂົາຟັງ, ແລະ ພວກຜູ້ຊາຍທັງຫລາຍກໍຢ້ານກົວ.
[9]ຈາກນັ້ນເຈົ້າອາບີເມເຫລັກຊົງໄດ້ເອີ້ນອັບຣາຮາມເຂົ້າມາເຝົ້າ ແລະ ຖາມກັບເຂົາວ່າ, "ເປັນຫຍັງເຈົ້າຈຶ່ງເຮັດເຊັ່ນນີ້ກັບເຮົາ?
ເຮົາໄດ້ເຮັດບາບຕໍ່ສູ້ກັບເຈົ້າຢ່າງໃດ ເຈົ້າໄດ້ນຳຄວາມບາບທີ່ຍິ່ງໃຫຍ່ມາເຫິງເຮົາ ແລະ ອານາຈັກຂອງເຮົາ?
ເຈົ້າໄດ້ເຮັດຕໍ່ເຮົາໃນສິ່ງທີ່ບໍ່ຄວນເຮັດ."
[10]ອາບີເມເຫລັກໄດ້ກ່າວກັບອັບຣາຮາມວ່າ, "ແມ່ນຫຍັງ ເຮັດໃຫ້ເຈົ້າເຮັດສິ່ງນີ້?"[11]ອັບຣາຮາມຈຶ່ງຕອບວ່າ, "ຂ້ານ້ອຍໄດ້ຄິດວ່າແນ່ນອນ,
ໃນສະຖານທີ່ນີ້ຄົງຈະບໍ່ມີໃຜຢຳເກງພຣະເຈົ້າ, ແລະ ພວກເຂົາອາດສັງຫານຂ້ານ້ອຍເພາະເມຍຂອງຂ້ານ້ອຍ.[12]ນອກຈາກນັ້ນ,
ຄວາມເປັນຈິງແລ້ວນາງເປັນນ້ອງສາວຂອງຂ້ານ້ອຍ, ນາງເປັນລູກສາວຂອງພໍ່ຂອງຂ້ານ້ອຍ, ແຕ່ບໍ່ແມ່ນລູກສາວຂອງແມ່ຂອງຂ້ານ້ອຍ, ແລະ
ນາງກໍໄດ້ກາຍມາເປັນເມຍຂອງຂ້ານ້ອຍ.
[13]ເມື່ອພຣະເຈົ້າຊົງໃຫ້ຂ້ານ້ອຍອອກຫນີອອກຈາກບ້ານຂອງພໍ່ຂອງຂ້ານ້ອຍ ແລະ ເດີນທາງຈາກທີ່ຫນຶ່ງໄປຍັງອີກທີ່ຫນຶ່ງ,
ຂ້ານ້ອຍໄດ້ເວົ້າກັບນາງວ່າ, ເຈົ້າຕ້ອງສະແດງເຖິງຄວາມສັດຊື່ນີ້ເຊັ່ນເມຍຂອງຂ້ອຍ, ຄືໃນທຸກບ່ອນທີ່ເຮົາຈະໄປໃຫ້ເວົ້າເຖິງຂ້ອຍວ່າ,
"ຂ້ອຍເປັນອ້າຍຂອງເຈົ້າ.""[14]ຝູງງົວ, ແລະ ຄົນຮັບໃຊ້ຊາຍຍິງຈຳນວນຫນຶ່ງ, ແລະ ມອບພວກເຂົາໃຫ້ອັບຣາຮາມ.
ຈາກນັ້ນພະອົງຊົງໄດ້ຄືນຊາຣາ, ເມຍຂອງອັບຣາຮາມໃຫ້ກັບເຂົາ.
[15]ເຈົ້າອາບີເມເຫລັກໄດ້ເວົ້າວ່າ, "ເບິ່ງເຖີດ, ດິນແດນຂອງເຮົາຢູ່ກັບເຈົ້າແລ້ວ.
ຈົ່ງເລືອກເອົາຢູ່ບ່ອນໃດກໍໄດ້ຕາມທີ່ເຈົ້າຕ້ອງການ."[16]ສ່ວນຊາຣາພະອົງກ່າວວ່າ, "ນີ້ແຫລະ, ເຮົາເອົາເງິນຫນຶ່ງພັນຫລຽນໃຫ້ອ້າຍຂອງເຈົ້າ.
ເປັນຂໍ້ພິສູດເຈົ້າທ່າມກາງສາຍຕາຄົນທັງຫລາຍທີ່ຢູ່ກັບເຈົ້າ, ແລະຕໍ່ຫນ້າຄົນທັງປວງ, ເຈົ້າໄດ້ເຮັດສິ່ງທີ່ຖືກຕ້ອງ."
[17]ຈາກນັ້ນ ອັບຣາຮາມໄດ້ອະທິຖານຕໍ່ພຣະເຈົ້າ, ແລະ ພຣະເຈົ້າຊົງເຮັດໃຫ້ອາບີເມເຫລັກ, ເມຍຂອງເຂົາ, ແລະ
ຂ້າທາດຜູ້ຍິງຂອງເຂົາດັ່ງນັ້ນພວກເຂົາຈຶ່ງສາມາດມີລູກໄດ້.
[18]ເພາະວ່າພຣະຢາເວໄດ້ຊົງເຮັດໃຫ້ຜູ້ຍິງທັງຫມົດໃນຄົວເຮືອນຂອງອາບີເມເຫລັກເປັນຫມັນຢ່າງສິ້ນບູນ, ເພາະເລື່ອງຂອງຊາຣາ,
ເມຍຂອງອັບຣາຮາມ.


generated on Tue Jun 17 19:01:42 2025

# 21

[1]ພຣະຢາເວຊົງໄດ້ເອົາໃຈໃສ່ຊາຣາດັ່ງທີ່ພຣະອົງໄດ້ກ່າວວ່າພຣະອົງຈະຊົງກະທຳ, ແລະ
ພຣະຢາເວຊົງໄດ້ເຮັດແກ່ຊາຣາເຫມືອນດັ່ງທີ່ພຣະອົງຊົງໄດ້ສັນຍາໄວ້.[2]ຊາຣາໄດ້ຕັ້ງທ້ອງ ແລະ ເກີດລູກຊາຍຄົນຫນຶ່ງໃຫ້ແກ່ອັບຣາຮາມ
ເມື່ອເພິ່ນເຖົ້າແກ່ແລ້ວ, ໃນເວລາທີ່ກຳນົດໄວ້ຕາມທີ່ພຣະເຈົ້າໄດ້ກ່າວແກ່ເພິ່ນແລ້ວນັ້ນ.[3]ອັບຣາຮາມໄດ້ຕັ້ງຊື່ລູກຊາຍຂອງເຂົາ,
ລູກຄົນດຽວທີ່ໄດ້ເກີດມາໃຫ້ເຂົາຜູ້ທີ່ຊາຣາໄດ້ໃຫ້ເຂົາເກີດມາແກ່ເພິ່ນຄື: ອີຊາກ.
[4]ອັບຣາຮາມໄດ້ເຮັດພິທີຕັດລູກຊາຍຂອງເພິ່ນຄືອີຊາກເມື່ອເຂົາອາຍຸໄດ້ແປດວັນ, ຕາມທີ່ພຣະເຈົ້າໄດ້ມີພຣະບັນຊາ.

[5]ອັບຣາຮາມມີອາຍຸໄດ້ຫນຶ່ງຮ້ອຍປີເມື່ອລູກຊາຍຂອງເຂົາຄືອີຊາກໄດ້ເກີດມາໃຫ້ເຂົາ.[6]ຊາຣາໄດ້ເວົ້າວ່າ, "ພຣະເຈົ້າຊົງໄດ້ເຮັດໃຫ້ຂ້ອຍປິ
ຕິຍິນດີມີສຽງຫົວ; ນັ້ນຄືທຸກຄົນທີ່ໄດ້ຍິນເລື່ອງນີ້ກໍຈະຫົວເລາະນຳຂ້ອຍ."[7]ນາງຈຶ່ງໄດ້ເວົ້າອີກດ້ວຍວ່າ, "ໃຜຄວນຈະເວົ້າກັບອັບຣາຮາມວ່າ
ຊາຣາມີລູກເພື່ອນາງໄດ້ດູແລ, ແລະ ຂ້ອຍຍັງໃຫ້ລູກຊາຍຄົນຫນຶ່ງແກ່ລາວເມື່ອເຖົ້າແກ່ແລ້ວ!"
[8]ເດັກຄົນນັ້ນໄດ້ຈະເລີນເຕີບໂຕ, ແລະ ໄດ້ເຊົານົມ, ແລະ ອັບຣາຮາມໄດ້ຈັດງານກິນລ້ຽງຢ່າງຍິ່ງໃຫຍ່ໃນວັນທີ່ອີຊາກຢ່ານົມ.[9]ເມື່ອຊາຣາໄດ້ເຫັນ
ລູກຊາຍຂອງຮາກາຊາວອີຢິບ, ຜູ້ຊຶ່ງນາງໄດ້ເກີດໃຫ້ແກ່ອັບຣາຮາມ, ກຳລັງເຢາະເຢີ້ຍ.
[10]ດັ່ງນັ້ນນາງຈຶ່ງໄດ້ເວົ້າກັບອັບຣາຮາມວ່າ, "ຈົ່ງສົ່ງຄົນຮັບໃຊ້ຍິງຜູ້ນີ້ ແລະ ລູກຊາຍຂອງນາງຫນີໄປສາ. ເພາະລູກຊາຍຂອງນາງ
ທາດຄົນນີ້ຈະບໍ່ເປັນຜູ້ສືບທອດມໍຣະດົກກັບລູກຊາຍຂອງຂ້ອຍ, ກັບອີຊາກ."[11]ສິ່ງນີ້ເຮັດໃຫ້ອັບຣາຮາມເປັນທຸກໃຈຫລາຍ ເພາະລູກຊາຍຂອງ
ເພິ່ນຄືກັນ.
[12]ແຕ່ພຣະເຈົ້າກ່າວແກ່ອັບຣາຮາມວ່າ, "ຢ່າອຸກໃຈເພາະເດັກຄົນນັ້ນເລີຍ, ແລະ ເພາະຄົນຮັບໃຊ້ຍິງຂອງເຈົ້າ.
ຈົ່ງຟັງຄຳຂອງນາງໃນທຸກສິ່ງທີ່ນາງເວົ້າແກ່ເຈົ້າໃນເລື່ອງນີ້, ເພາະໂດຍທາງອີຊາກເຊື້ອສາຍຂອງເຈົ້າຈະມີຊື່ສຽງ.[13]ເຮົາຈະເຮັດໃຫ້ລູກຊາຍຂອງ
ຍິງຮັບໃຊ້ຄົນນັ້ນເປັນປະເທດຫນຶ່ງດ້ວຍ, ເພາະວ່າລາວກໍເປັນເຊື້ອສາຍຂອງເຈົ້າ."
[14]ອັບຣາຮາມໄດ້ລຸກຂຶ້ນແຕ່ເຊົ້າໆ, ເອົາເຂົ້າຈີ່ ແລະ ນ້ຳຫນຶ່ງຖົງຫນັງ, ແລະ ມອບໃຫ້ແກ່ຮາກາ. ວາງເທິງໄລ່ຂອງນາງ. ເພິ່ນໄດ້ເອົາເດັກນ້ອຍ
ເຈ່ຍໃສ່ຫລັງໃຫ້ນາງ ແລະ ສົ່ງນາງໄປ. ນາງໄດ້ຈາກໄປ ແລະເດີນໄປຢ່າງບໍ່ມີຈຸດມຸ່ງຫມາຍໃນຖິ່ນແຫ້ງແລ້ງກັນດານເບເອນເຊບາ.[15]ເມື່ອນ້ຳໃນ
ຖົງຫນັງຫມົດ, ນາງຈຶ່ງປະເດັກໄວ້ຢູ່ໃຕ້ພຸ່ມໄມ້ແຫ່ງຫນຶ່ງ.[16]ຈາກນັ້ນນາງໄດ້ໄປ, ແລະ ນັ່ງລົງບໍ່ໄກໄປຈາກເຂົາ, ໄລຍະໄກປະມານລູກທະນູຕົກ.
ເພາະນາງໄດ້ເວົ້າວ່າ, "ຢ່າໃຫ້ຂ້ອຍຫລຽວເບິ່ງຄວາມຕາຍຂອງເດັກນັ້ນ." ເມື່ອນາງໄດ້ນັ່ງທີ່ນັ້ນກົງກັນຂ້ວາມກັບເຂົາ, ນາງໄດ້ຮ້ອງສຽງດັງ
ຮ້ອງໄຫ້ຂຶ້ນ.
[17]ພຣະເຈົ້າຊົງໄດ້ຍິນສຽງຂອງເດັກນັ້ນ, ແລະທູດສະຫວັນຂອງພຣະເຈົ້າໄດ້ເອີ້ນ, ຮາກາຈາກທ້ອງຟ້າ, ແລະເວົ້າກັບນາງວ່າ, "ເຈົ້າມີຄວາມ
ເດືອດຮ້ອນຫຍັງ? ຢ່າຢ້ານກົວເລີຍ, ເພາະວ່າພຣະເຈົ້າໄດ້ຍິນສຽງເດັກນັ້ນເຂົາຢູ່ໃສ.[18]ຈົ່ງລຸກຂຶ້ນ,ຍົກເດັກນັ້ນຂຶ້ນ, ແລະໃຫ້ກຳລັງໃຈເຂົາ,
ເພາະວ່າເຮົາຈະເຮັດໃຫ້ເຂົາເປັນຊົນຊາດທີ່ຍິ່ງໃຫຍ່ຊົນຊາດຫນຶ່ງ."
[19]ຈາກນັ້ນພຣະເຈົ້າຊົງໄດ້ເປີດຕາຂອງນາງ, ແລະນາງໄດ້ເຫັນນ້ຳສ້າງ. ນາງຈຶ່ງໄປຕັກເອົານ້ຳຈົນເຕັມຖົງຫນັງ, ແລະເອົາມາໃຫ້ລູກຊາຍດື່ມ.
[20]ພຣະເຈົ້າໄດ້ປະທັບຢູ່ນຳເດັກນັ້ນຈົນເຂົາຈະເລີນເຕີບໂຕຂຶ້ນ, ເຂົາໄດ້ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານ, ແລະກາຍເປັນມືທະນູ.
[21]ເຂົາອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານປາຣານ, ແລະແມ່ຂອງເຂົາໄດ້ຫາເມຍຈາກປະເທດອີຢິບມາໃຫ້ເຂົາ.
[22]ແລະໃນເວລານັ້ນ ທີ່ອາບີເມເຫລັກ ແລະຟີໂກນແມ່ທັບຂອງເພິ່ນໄດ້ກ່າວກັບອັບຣາຮາມ ແລະເວົ້າວ່າ, "ພຣະເຈົ້າສະຖິດຢູ່ກັບເຈົ້າ. ໃນທຸກສິ່ງທີ່
ເຈົ້າເຮັດ.[23]ສະນັ້ນ ບັດນີ້ຈົ່ງປະຕິຍານຕໍ່ເຮົາໃນທີ່ນີ້ໂດຍພຣະເຈົ້າທີ່ ເຈົ້າຈະບໍ່ປະພຶດຢ່າງຜິດໆກັບເຮົາ, ຫລືກັບລູກຫລານຂອງເຮົາ, ຫລືກັບ
ເຊື້ອສາຍທັງຫລາຍຂອງເຮົາ. ເຮົາສັດຊື່ຕໍ່ເຈົ້າ ດັ່ງນັ້ນ ຈົ່ງສະແດງແກ່ເຮົາ ແລະແກ່ດິນແດນຊຶ່ງເຈົ້າກຳລັງອາໄສຢູ່ນີ້.
ເຫມືອນພັນທະສັນຍາທີ່ສັດຊື່ທີ່ເຮົາໄດ້ສະແດງຕໍ່ເຈົ້າ."[24]ອັບຣາຮາມຕອບວ່າ, "ຂ້ານ້ອຍຂໍປະຕິຍານ."
[25]ອັບຣາຮາມຍັງໄດ້ເວົ້າກັບອາບີເມເຫລັກເຖິງເລື່ອງນ້ຳສ້າງ ທີ່ຂ້າຣາຊະການຂອງອາບີເມເຫລັກໄດ້ຢຶດໄປຈາກເພິ່ນນັ້ນ.[26]ອາບີເມເຫລັກໄດ້ຕອບ
ວ່າ, "ເຮົາບໍ່ຮູ້ຈັກ ວ່າໃຜໄດ້ເຮັດສິ່ງນີ້. ເຈົ້າບໍ່ໄດ້ບອກເຮົາມາກ່ອນຫນ້ານີ້, ເຮົາບໍ່ເຄີຍໄດ້ຍິນເລື່ອງນີ້ມາກ່ອນຈົນເຖິງວັນນີ້."[27]ດັ່ງນັ້ນອັບຣາຮາມ
ກໍໄດ້ເອົາແກະ, ແລະງົວບາງໂຕມອບໃຫ້ອາບີເມເຫລັກ, ແລະຊາຍທັງສອງໄດ້ເຮັດພັນທະສັນຍາກັນ.
[28]ຈາກນັ້ນອັບຣາຮາມໄດ້ແຍກເອົາລູກແກະໂຕແມ່ເຈັດໂຕ ອອກມາຈາກຝູງແກະຕາມທີ່ກຳນົດໄວ້.[29]ອາບີເມເຫລັກໄດ້ຖາມແກ່ອັບຣາຮາມວ່າ,
"ລູກແກະໂຕແມ່ເຈັດໂຕເຫລົ່ານີ້ທີ່ເຈົ້າໄດ້ຈັດແຍກຕາມທີ່ກຳນົດໄວ້ມີຄວາມຫມາຍແນວໃດ?"[30]ເຂົາໄດ້ທູນຕອບວ່າ, "ລູກແກະໂຕແມ່ເຈັດ
ໂຕເຫລົ່ານີ້ ພຣະອົງຈະໄດ້ຮັບຈາກມືຂອງຂ້ານ້ອຍ, ນີ້ແຫລະຈະເປັນພະຍານສຳລັບຂ້ານ້ອຍ, ວ່າຂ້ານ້ອຍເປັນຜູ້ຂຸດນ້ຳສ້າງນີ້."
[31]ເຂົາຈຶ່ງໄດ້ເອີ້ນສະຖານທີ່ນັ້ນວ່າ ເບຍເອເຊບາ, ເພາະວ່າພວກເຂົາທັງສອງຝ່າຍໄດ້ປະຕິຍານກັນທີ່ນັ້ນ.[32]ພວກເຂົາໄດ້ເຮັດພັນທະສັນຍາກັນທີ່
ເບຍເອເຊບາ, ແລະຈາກນັ້ນອາບີເມເຫລັກ, ແລະຟີໂກນແມ່ທັບຂອງເພິ່ນ, ໄດ້ກັບໄປຍັງດິນແດນຊາວຟີລິດສະຕິນ.
[33]ອັບຣາຮາມໄດ້ປູກຕົ້ນສົນຫມອກ ໄວ້ທີ່ເບຍເອເຊບາ. ທີ່ນັ້ນເຂົາໄດ້ນະມັດສະການພຣະຢາເວ, ພຣະເຈົ້ານິຣັນດອນ.[34]ອັບຣາຮາມຍັງຄົງ
ໄດ້ເປັນຄົນຕ່າງດ້າວໃນແຜ່ນດິນຂອງຟີລິດສະຕິນເປັນເວລາຫລາຍວັນ.


generated on Tue Jun 17 19:01:42 2025

22 1ພຣະເຈົ້າຊົງໄດ້ທົດລອງອັບຣາຮາມ. ພຣະອົງໄດ້ກ່າວແກ່ເພິ່ນວ່າ, "ອັບຣາຮາມເອີຍ!" ແລະອັບຣາຮາມກໍຕອບວ່າ, "ໂດຍ ຂ້ານ້ອຍຢູ່ທີ່ນີ້
."2ຈາກນັ້ນພຣະເຈົ້າບອກວ່າ, "ຈົ່ງນຳລູກຊາຍຂອງເຈົ້າ, ຄືລູກຊາຍພຽງຄົນດຽວຂອງເຈົ້າຜູ້ທີ່ເຈົ້າຮັກຄືອີຊາກ, ແລະ ໄປທີ່ແຄວ້ນໂມຣີຢາ.
ຖວາຍເຂົາທີ່ນັ້ນເປັນເຄື່ອງເຜົາບູຊາເທິງພູເຂົາລູກຫນຶ່ງທີ່ນັ້ນ, ຊຶ່ງເຮົາຈະບອກແກ່ເຈົ້າ."3ອັບຣາຮາມຈຶ່ງລຸກຂຶ້ນແຕ່ເຊົ້າມືດ, ຜູກອານລໍຂອງເຂົາ,
ແລະ ຄົນຮັບໃຊ້ສອງຄົນໄປກັບເພິ່ນດ້ວຍ, ພ້ອມກັບອີຊາກລູກຊາຍຂອງເພິ່ນ. ເພິ່ນໄດ້ຕັດໄມ້ຟືນສຳລັບການເຜົາເຄື່ອງບູຊາ,
ດັ່ງນັ້ນຈຶ່ງເລີ່ມຕົ້ນການເດີນທາງຂອງເພິ່ນໄປຍັງບ່ອນທີ່ ທີ່ພຣະເຈົ້າຊົງໄດ້ບອກແກ່ເພິ່ນນັ້ນ.

4ໃນວັນທີສາມ ອັບຣາຮາມໄດ້ຫລຽວຂຶ້ນໄປ ແລະໄດ້ເຫັນບ່ອນນັ້ນຢູ່ແຕ່ໄກ.5ອັບຣາຮາມໄດ້ເວົ້າກັບຄົນຮັບໃຊ້ຂອງເພິ່ນວ່າ, "ຈົ່ງຢູ່ທີ່ນີ້ກັບລໍນັ້ນ,
ແລະ ເຮົາກັບລູກຈະໄປທີ່ນັ້ນ. ເຮົາຈະຂຶ້ນໄປນະມັດສະການພຣະເຈົ້າ ແລະ ຈະກັບມາຫາພວກເຈົ້າ."6ຈາກນັ້ນອັບຣາຮາມໄດ້ເອົາຟືນສຳລັບ
ເຜົາເຄື່ອງບູຊາໃຫ້ອີຊາກແບກຂຶ້ນໄປ. ເພິ່ນຖືໄຟ ແລະ ມີດໃນມືຂອງເພິ່ນເອງ; ແລະ ພວກເພິ່ນທັງສອງໄດ້ໄປດ້ວຍກັນ.
7ອີຊາກໄດ້ເວົ້າກັບອັບຣາຮາມພໍ່ຂອງເຂົາວ່າ, "ພໍ່ເອີຍ" ພໍ່ຈຶ່ງຕອບວ່າ, "ເຮົາຢູ່ນີ້ ລູກເອີຍ " ເຂົາໄດ້ເວົ້າວ່າ, "ເບິ່ງແມ, ທີ່ນີ້ມີໄຟ ແລະໄມ້ຟືນ, ແຕ່
ລູກແກະທີ່ຈະເຜົາບູຊານັ້ນຢູ່ໃສ?"8ອັບຣາຮາມຕອບວ່າ, "ລູກເອີຍ ພຣະເຈົ້າ ພຣະອົງເອງຈະຈັດຕຽມລູກແກະສຳລັບການເຜົາບູຊາເອງ."
ດັ່ງນັ້ນພວກເຂົາທັງສອງ, ຈຶ່ງອອກໄປດ້ວຍກັນ.
9ເມື່ອພວກເພິ່ນມາຮອດບ່ອນທີ່ຊຶ່ງພຣະເຈົ້າໄດ້ບອກແກ່ເພິ່ນນັ້ນ, ອັບຣາຮາມໄດ້ສ້າງແທ່ນບູຊາຂຶ້ນທີ່ນັ້ນ ແລະວາງຟືນເທິງແທ່ນນັ້ນ.
ຈາກນັ້ນເພິ່ນໄດ້ມັດ ອີຊາກ, ລູກຊາຍຂອງຕົນ ແລະວາງເຂົາເທິງແທ່ນບູຊາເທິງກອງຟືນ.10ອັບຣາຮາມໄດ້ຍື່ນມືຂອງເຂົາອອກ ຈັບເອົາມີດເພື່ອຈະ
ຂ້າລູກຊາຍຂອງເຂົາ.
11ທັນໃດນັ້ນ ທູດສະຫວັນຂອງພຣະຢາເວໄດ້ເອີ້ນເຂົາມາຈາກທ້ອງຟ້າເວົ້າວ່າ, "ອັບຣາຮາມ, ອັບຣາຮາມເອີຍ!" ແລະເພິ່ນຈຶ່ງທູນຕອບວ່າ,
"ຂ້ານ້ອຍຢູ່ທີ່ນີ້ກຳລັງຟັງຢູ່."12ທູດສະຫວັນກ່າວວ່າ, "ຢ່າແຕະຕ້ອງເດັກນັ້ນຫລືເຮັດສິ່ງໃດທີ່ຈະທຳຮ້າຍເຂົາ, ບັດນີ້ ເຮົາຮູ້ແລ້ວວ່າ ເຈົ້າເຊື່ອຟັງ
ແລະຢຳເກງພຣະເຈົ້າ, ດ້ວຍເຫັນວ່າເຈົ້ານັ້ນບໍ່ໄດ້ຫວງແຫນລູກຊາຍຂອງເຈົ້າ, ລູກຊາຍພຽງຄົນດຽວຂອງເຈົ້າ,ຈາກເຮົາ."
13ອັບຣາຮາມແນມໄປຮອບໆ ແລະ ເບິ່ງເຖີດ, ຂ້າງຫລັງເພິ່ນມີແກະໂຕຜູ້ໂຕຫນຶ່ງ ເຂົາຂອງມັນຄາຢູ່ໃນພຸ່ມໄມ້. ອັບຣາຮາມໄດ້ຍ່າງໄປ ແລະ ອຸ້ມ
ແກະໂຕຜູ້ນັ້ນ ແລະ ຖວາຍມັນເຄື່ອງເຜົາບູຊາແທນລູກຊາຍຂອງຕົນ.14ດັ່ງນັ້ນອັບຣາຮາມຈຶ່ງໄດ້ເອີ້ນບ່ອນນັ້ນວ່າ, "ພຣະຢາເວຊົງຈັດຕຽມ" ແລະ
ເຮັດໃຫ້ກ່າວກັນຈົນເຖິງທຸກວັນນີ້, "ທີ່ເທິງພູເຂົາຂອງພຣະຢາເວຈະມີການຖືກຈັດຕຽມໄວ້."
15ທູດສະຫວັນຂອງພຣະຢາເວໄດ້ເອີ້ນອັບຣາຮາມ ຄັ້ງທີສອງຈາກທ້ອງຟ້າ.16ແລະກ່າວວ່າ, "ນີ້ຄືຄຳສັ່ງຂອງພຣະຢາເວ ໂດຍພຣະອົງເອງ
ເຮົາໄດ້ສາບານວ່າ, ເພາະເຈົ້າໄດ້ເຮັດໃນສິ່ງນີ້, ແລະບໍ່ໄດ້ຫວງແຫນລູກຊາຍຂອງເຈົ້າ ລູກຊາຍພຽງຄົນດຽວຂອງເຈົ້າໄວ້,
17ແນ່ນອນເຮົາຈະອວຍພອນເຈົ້າ ແລະເຮົາຈະເພີ່ມເຊື້ອສາຍທັງຫລາຍຂອງເຈົ້າຢ່າງຫລວງຫລາຍເຫມືອນດັ່ງດວງດາວໃນທ້ອງຟ້າ,
ແລະເຫມືອນເມັດດິນຊາຍທີ່ແຄມທະເລ, ແລະບັນດາເຊື້ອສາຍທັງຫລາຍຂອງເຈົ້າຈະຍຶດຄອງປະຕູເມືອງຂອງສັດຕຣູທັງຫລາຍຂອງພວກເຂົາ.
18ຜ່ານບັນດາຜູ້ສືບເຊື້ອສາຍຂອງເຈົ້າບັນດາຊົນຊາດທັງຫລາຍແຫ່ງແຜ່ນດິນຈະໄດ້ຮັບພຣະພອນ, ເພາະເຈົ້າໄດ້ເຊື່ອຟັງສຽງ
ຂອງເຮົາ."19ດັ່ງນັ້ນອັບຣາຮາມໄດ້ກັບມາຫາຄົນຮັບໃຊ້ຂອງຕົນ, ແລະ ພວກເຂົາໄດ້ເດີນທາງກັບໄປດ້ວຍກັນເຖິງເມືອງເບເອເຊບາ, ແລະ
ເຂົາໄດ້ອາໄສຢູ່ທີ່ເມືອງເບເອເຊບາ.
20ຫລັງຈາກທີ່ສິ່ງເຫລົ່ານີ້ຜ່ານໄປອັບຣາຮາມໄດ້ຮັບການບອກເລົ່າວ່າ, "ມີລະກາໄດ້ໃຫ້ກຳເນີດລູກທັງຫລາຍ, ແກ່ນາໂຮນ້ອງຊາຍຂອງຕົນ
ດ້ວຍ."21ພວກເຂົາຄືອູເຊລູກຊາຍກົກຂອງເຂົາ, ບູເຊນ້ອງຊາຍຂອງເຂົາ, ເກມູເອນພໍ່ຂອງອາຣາມ,22ເກເສັດ, ຮາໂຊ, ປິນດາດ, ຢິດລັບ, ແລະ
ເບທູເອນ.
23ເບທູເອນເປັນພໍ່ຂອງນາງເຣເບກາ. ທັງແປດຄົນເຫລົ່ານີ້ຄືລູກທີ່ມີລະກາທີ່ໄດ້ເກີດໃຫ້ແກ່ນາໂຮ, ນ້ອງຊາຍຂອງອັບຣາຮາມ.24ເມຍ
ນ້ອຍຂອງເຂົາທີ່ຊື່ເຣອູມາກໍໄດ້ເກີດ: ເຕບາ, ກາຮາມ, ຕາຮັດ, ແລະມາອາກາ.

 generated on Tue Jun 17 19:01:42 2025

23 1ນາງຊາຣາມີອາຍຸໄດ້ຫນຶ່ງຮ້ອຍຊາວເຈັດປີ. ນີ້ຄືປີທັງຫລາຍແຫ່ງຊີວິດຂອງຊາຣາ. 2ຊາຣາ ໄດ້ຕາຍໄປທີ່ເມືອງເຮັບໂຣນ,ໃນແຜ່ນດິນ
ການາອານ, ແລະອັບຣາຮາມໄດ້ໂສກເສົ້າເສຍໃຈໄວ້ທຸກໃຫ້ກັບນາງຊາຣາ.

3ຈາກນັ້ນອັບຣາຮາມໄດ້ລຸກຂຶ້ນ ແລະໄດ້ໄປຈາກເມຍທີ່ຕາຍໄປແລ້ວຂອງເຂົາ, ແລະໄດ້ເວົ້າກັບບັນດາລູກຊາຍທັງຫລາຍຂອງຊາວຮິດຕີວ່າ,
4"ຂ້ານ້ອຍເປັນຄົນຕ່າງດ້າວຄົນຫນຶ່ງຢູ່ທ່າມກາງພວກທ່ານ. ກະລຸນາໃຫ້ທີ່ດິນເປັນບ່ອນຝັງສົບທ່າມກາງພວກທ່ານ, ເພື່ອທີ່ຂ້ານ້ອຍຈະໄດ້ຝັງ
ຊາກຮ່າງກາຍທີ່ຕາຍຂອງຂ້ານ້ອຍ."
5ລູກຊາຍທັງຫລາຍຂອງຊາວຮິດຕີໄດ້ຕອບອັບຣາຮາມ, ກ່າວວ່າ, 6"ຈົ່ງຟັງເຮົາເຈົ້ານາຍຂອງເຮົາ. ທ່ານ
ຄືເຈົ້າຊາຍຂອງພຣະເຈົ້າທ່າມກາງພວກເຮົາ. ຈົ່ງຝັງສົບເມຍຂອງທ່ານໃນຂຸມຝັງສົບທີ່ດີທີ່ສຸດຂອງພວກເຮົາເຖີ້ນ. ບໍ່ມີໃຜໃນພວກເຮົາຈະ
ປະຕິເສດບໍ່ໃຫ້ອູບມຸງຂອງເຂົາໃຫ້ແກ່ທ່ານ, ເພື່ອທີ່ທ່ານຈະຝັງສົບຄົນຕາຍຂອງທ່ານ."
7 ອັບຣາຮາມໄດ້ລຸກຂຶ້ນ ແລະກົ້ມລົງຄໍານັບຊາວແຜ່ນດິນນັ້ນ, ລຸກຊາຍທັງຫລາຍຂອງຄົນຮິດຕີ. 8ເພິ່ນໄດ້ເວົ້າກັບພວກເຂົາ, ກ່າວວ່າ, "ຖ້າ
ພວກທ່ານຕົກລົງທີ່ຈະໃຫ້ຂ້ານ້ອຍ ຝັງສົບເມຍຂອງຂ້ານ້ອຍ ຢ່າງນັ້ນຈົ່ງຟັງຂ້ານ້ອຍ ແລະຂໍຮ້ອງເອຟະໂຣນ ລູກຊາຍຂອງໂຊຮາ, ເພື່ອຂ້ານ້ອຍ.
9ຂໍໃຫ້ເຂົາຂາຍຖ້ໍາແຫ່ງມັກເປລາທີ່ເຂົາເປັນເຈົ້າຂອງຊຶ່ງຢູ່ທີ່ປາຍນາຂອງເຂົາ, ໃຫ້ຂ້ານ້ອຍຂໍໃຫ້ເຂົາຂາຍທີ່ນັ້ນໃຫ້ຂ້ານ້ອຍ ເຕັມຕາມລາຄາ,
ໂດຍເປີດເຜີຍໃຫ້ໃຊ້ເປັນບ່ອນຝັງສົບ."
10ໃນຂະນະນັ້ນເອຟະໂຣນກໍາລັງນັ່ງຢູ່ທ່າມກາງພວກລູກຊາຍຂອງຊາວຮິດຕີ, ແລະເອຟະໂຣນຄົນຮິດຕີໄດ້ຕອບອັບຣາຮາມໃຫ້
ລູກຊາຍທັງຫລາຍຂອງຄົນຮິດຕີໄດ້ຍິນ, ຄົນເຫລົ່ານັ້ນທັງຫມົດທີ່ໄດ້ມາທີ່ປະຕູເມືອງຂອງເຂົາ, ກ່າວວ່າ, 11"ຢ່າເລີຍ, ເຈົ້ານາຍຂອງຂ້ານ້ອຍ, ຈົ່ງ
ຟັງຂ້ານ້ອຍກ່ອນ. ຂ້ານ້ອຍຂໍໃຫ້ທີ່ນາ, ແລະຖ້ໍາທີ່ຢູ່ທີ່ນັ້ນໃຫ້ແກ່ທ່ານ. ຂ້ານ້ອຍໃຫ້ແກ່ທ່ານຊ້ອງຫນ້າລູກຊາຍທັງຫລາຍຂອງປະຊາຊົນຂອງ
ຂ້ານ້ອຍ. ຂ້ານ້ອຍໃຫ້ທ່ານໃຊ້ເປັນທີ່ຝັງຄົນຕາຍຂອງທ່ານ."
12ອັບຣາຮາມຈຶ່ງໄດ້ກົ້ມລົງຄໍານັບຕໍ່ຫນ້າຊາວເມືອງນັ້ນ. 13ເຂົາໄດ້ເວົ້າກັບເອຟະໂຣນໃຫ້ຊາວເມືອງນັ້ນໄດ້ຍິນກ່າວວ່າ,"ແຕ່ຖ້າທ່ານເຕັມໃຈ
ກະລຸນາຟັງຂ້ານ້ອຍ. ຂ້ານ້ອຍຈະຈ່າຍເງິນສໍາລັບທີ່ນານັ້ນ. ຈົ່ງຮັບເງິນຈາກຂ້ານ້ອຍ, ແລະ ຂ້ານ້ອຍກໍຈະຝັງຊາກຮ່າງກາຍທີ່ຕາຍຂອງຂ້ານ້ອຍ
ໃນທີ່ນັ້ນ."
14ເອຟະໂຣນໄດ້ຕອບອັບຣາຮາມວ່າ, ເຈົ້ານາຍຂອງຂ້ານ້ອຍ, 15"ກະລຸນາ, ຟັງຂ້ານ້ອຍ. ແມ່ທີ່ດິນຜືນຫນຶ່ງມີຄ່າເປັນເງິນຫນັກພຽງ ສີ່ຮ້ອຍຫລຽນ
ເທົ່ານັ້ນ, ມັນຈະມີຫຍັງລະຫວ່າງທ່ານກັບຂ້ານ້ອຍ? ຈົ່ງຝັງຄົນຕາຍຂອງທ່ານເຖີດ." 16ອັບຣາຮາມໄດ້ຟັງເອຟະໂຣນ
ແລະອັບຣາຮາມໄດ້ຊັ່ງເງິນໃຫ້ແກ່ເອຟະໂຣນຕາມຈໍານວນທີ່ເຂົາໄດ້ບອກໃຫ້ລູກຊາຍທັງຫລາຍຂອງຊາວຮິດຕີໄດ້ຍິນເງິນ
ຫນັກສີ່ຮ້ອຍຫລຽນຕາມມາດຕະຖານການຊັ່ງຂອງພໍ່ຄ້າທັງຫລາຍ.
17ດັ່ງນັ້ນທີ່ນາຂອງເອຟະໂຣນ, ທີ່ຢູ່ໃນມັກເປລາ, ຊຶ່ງຢູ່ຖັດຈາກມໍາເຣນັ້ນຄືທີ່ນາຖ້ໍາ, ທີ່ຢູ່ທີ່ນັ້ນ ແລະຕົ້ນໄມ້ທັງຫມົດທີ່ຢູ່ໃນທົ່ງນານັ້ນ,ແລະຮອບໆ
ເຂດແດນ. 18ໄດ້ຖືກມອບໃຫ້ອັບຣາຮາມດ້ວຍການຊື້ຕໍ່ຫນ້າບັນດາລູກຊາຍທັງຫລາຍຂອງຄົນຮິດຕີ,
ຕໍ່ຫນ້າຄົນເຫລົ່ານັ້ນທັງຫມົດທີ່ໄດ້ມາທີ່ປະຕູເມືອງຂອງເຂົາ.
19ຫລັງຈາກນີ້ອັບຣາຮາມກໍຝັງສົບຊາຣາເມຍຂອງຕົນໃນຖ້ໍາຂອງທີ່ນາຂອງມັກເປລາ, ຊຶ່ງຢູ່ຖັດຈາກມໍາເຣນັ້ນ, ຄືເຮັບໂຣນ, ໃນດິນແດນ
ການາອານ. 20ດັ່ງນັ້ນທີ່ນາ ແລະ ຖ້ໍາທີ່ນັ້ນໄດ້ຖືກມອບໃຫ້ ອັບຣາຮາມເປັນທີ່ດິນທີ່ໃຊ້ເປັນບ່ອນຝັງສົບຈາກລູກຊາຍທັງຫລາຍຂອງຄົນຮິດຕີ.

24 1ຂະນະນັ້ນອັບຣາຮາມກໍເຖົ້າແກ່ ແລະມີອາຍຸສູງຫລາຍແລ້ວ ແລະພຣະຢາເວໄດ້ຊົງອວຍພອນອັບຣາຮາມໃນທຸກສິ່ງທຸກຢ່າງ.2ເພິ່ນໄດ້ເວົ້າ
ກັບຄົນຮັບໃຊ້ຂອງເພິ່ນຄົນທີ່ມີອາຍຸຫລາຍທີ່ສຸດໃນຄົວເຮືອນຂອງເພິ່ນ ແລະເປັນຜູ້ຊົງດູແລທຸກສິ່ງທຸກຢ່າງທີ່ເພິ່ນມີກ່າວວ່າ, "ຈົ່ງວາງມື
ຂອງເຈົ້າໃສ່ວ່າງຂາອ່ອນຂອງຂ້ອຍ.3ແລະຂ້ອຍຈະໃຫ້ເຈົ້າສາບານ, ໃນນາມຂອງພຣະຢາເວ ພຣະເຈົ້າແຫ່ງທ້ອງຟ້າ ແລະ
ພຣະເຈົ້າຂອງແຜ່ນດິນວ່າ, ເຈົ້າຈະບໍ່ຫາເມຍໃຫ້ລູກຊາຍຂອງຂ້ອຍ ຈາກລູກສາວທັງຫລາຍຂອງຄົນການາອານ,
ຜູ້ທີ່ເຮົາອາໄສຢູ່ທ່າມກາງພວກເຂົາ.4ແຕ່ເຈົ້າຈົ່ງກັບໄປຍັງດິນແດນຂອງຂ້ອຍ, ແລະພວກຍາດພີ່ນ້ອງຂອງເຮົາແລະຫາເມຍໃຫ້ອີຊາກ
ລູກຊາຍຂອງຂ້ອຍ."

5ຄົນຮັບໃຊ້ນັ້ນໄດ້ຖາມອັບຣາຮາມວ່າ, "ຖ້າຍິງນັ້ນບໍ່ເຕັມໃຈທີ່ຈະຕິດຕາມຂ້ານ້ອຍ ກັບມາດິນແດນນີ້ເດ? ຂ້ານ້ອຍຈະພາລູກຊາຍຂອງທ່ານກັບ
ໄປຍັງແຜ່ນດິນທີ່ທ່ານຈາກມານັ້ນບໍ?"6ອັບຣາຮາມໄດ້ຕອບເຂົາວ່າ, "ລະວັງ ຢ່າພາລູກຊາຍຂອງຂ້ອຍກັບໄປທີ່ນັ້ນເດັດຂາດ!7ພຣະຢາເວ,
ພຣະເຈົ້າແຫ່ງຟ້າສະຫວັນ, ຜູ້ໄດ້ຊົງນຳຂ້ອຍອອກມາຈາກບ້ານຂອງພໍ່ ແລະ ຈາກແຜ່ນດິນຂອງພວກຍາດຕິພີ່ນ້ອງຂອງຂ້ອຍ ຜູ້ໄດ້ຊົງສັນຍາ
ກັບເຮົາດ້ວຍຄຳສາບານທີ່ໜັກແໜ້ນແນ່ນອນ, ກ່າວວ່າ ເຮົາຈະມອບແຜ່ນດິນນີ້ໃຫ້ແກ່ຜູ້ທີ່ສືບເຊື້ອສາຍຂອງເຈົ້າ,' ພຣະອົງຈະຊົງສົ່ງ
ທູດສະຫວັນຂອງພຣະອົງນຳໜ້າໄປ, ແລະ ເຈົ້າຈະໄດ້ເມຍສຳລັບໃຫ້ລູກຊາຍຂອງຂ້ອຍຈາກທີ່ນັ້ນ.
8ແຕ່ຖ້າຍິງນັ້ນບໍ່ເຕັມໃຈທີ່ຈະຕິດຕາມເຈົ້າມານັ້ນ, ກໍຫມາຍຄວາມວ່າ ເຈົ້າເປັນອິສະຫລະຈາກຄຳສາບານທີ່ໃຫ້ໄວ້ກັບເຮົາ. ພຽງແຕ່ເຈົ້າຢ່າພາ
ລູກຊາຍຂອງຂ້ອຍກັບໄປທີ່ນັ້ນ."9ຄົນຮັບໃຊ້ນັ້ນກໍໄດ້ເອົາມືຂອງເຂົາວາງທີ່ໃຕ້ຂາອ່ອນຂອງອັບຣາຮາມເຈົ້ານາຍຂອງຕົນ, ແລະສາບານ
ຕໍ່ທ່ານກ່ຽວກັບເລື່ອງນີ້.
10ຄົນຮັບໃຊ້ນັ້ນ ໄດ້ນຳເອົາອູດສິບໂຕຂອງເຈົ້ານາຍຂອງເຂົາ ແລະອອກເດີນທາງ. ເຂົາໄດ້ນຳຂອງຂວັນຊະນິດຕ່າງໆ
ຈາກເຈົ້ານາຍຂອງເຂົາໄປກັບເຂົາດ້ວຍ. ເຂົາໄດ້ອອກເດີນທາງ ແລະໄປຍັງດິນແດນເມໂຊໂປຕາເມຍ, ໄປເມືອງຂອງນາໂຮ.11ເຂົາໄດ້ໃຫ້ພວກອູດ
ຄຸເຂົ່າລົງ ທີ່ບໍລິເວນນ້ຳສ້າງນອກເມືອງນັ້ນ ມັນເປັນເວລາຄ່ຳ. ເປັນເວລາທີ່ພວກຜູ້ຍິງຈະອອກມາຕັກນ້ຳ.
12ເຂົາຈຶ່ງໄດ້ກ່າວວ່າ,"ພຣະຢາເວ, ພຣະເຈົ້າຂອງອັບຣາຮາມ, ເຈົ້ານາຍຂອງຂ້ານ້ອຍ ໃນວັນນີ້ຂໍພຣະອົງປຣະທານ ສິ່ງທີ່ມີຄວາມສຳເລັດ
ໃຫ້ຂ້ານ້ອຍ ແລະສຳແດງພັນທະສັນຍາທີ່ສັດຊື່ແກ່ອັບຣາຮາມເຈົ້ານາຍຂອງຂ້ານ້ອຍ.13ເບິ່ງເຖີດ, ຂະນະທີ່ຂ້ານ້ອຍກຳລັງຢືນຢູ່ທີ່ນ້ຳພຸ,
ແລະພວກລູກສາວຂອງຜູ້ຊາຍທັງຫລາຍຂອງເມືອງນີ້ກຳລັງອອກມາຕັກນ້ຳ.14ຂໍໃຫ້ສິ່ງນີ້ເກີດຂຶ້ນເຖີດ.
ເມື່ອຂ້ານ້ອຍເວົ້າກັບຍິງສາວຄົນຫນຶ່ງຄົນໃດວ່າ,ຂໍລົດໄຫນ້ຳຂອງເຈົ້າລົງໃຫ້ເຮົາດື່ມນ້ຳແດ່, ແລະນາງຈະເວົ້າກັບຂ້ານອັຍວ່າ, ຈົ່ງດື່ມເຖີດ,
ແລະຂ້ອຍຈະເອົານ້ຳໃຫ້ຝູງອູດຂອງທ່ານກິນນຳດ້ວຍ, ຂໍໃຫ້ນາງເປັນຜູ້ທີ່ພຣະອົງຊົງກຳນົດໄວ້ໃຫ້ສຳລັບອີຊາກ ຜູ້ຮັບໃຊ້ຂອງພຣະອົງ.
ຄືດ້ວຍການນີ້ ຂ້ານ້ອຍຈະຮູ້ໄດ້ວ່າພຣະອົງໄດ້ຊົງສຳແດງພັນທະສັນຍາ ທີ່ສັດຊື່ຕໍ່ເຈົ້ານາຍຂອງຂ້ານ້ອຍ."
15ເວລາຜ່ານໄປແມ່ນວ່າເຂົາຍັງເວົ້າບໍ່ຈົບ ເບິ່ງເຖີດ, ນາງເຣເບກາໄດ້ອອກມາພ້ອມດວ້ຍໄຫນ້ຳແບກເທິງບ່າຂອງນາງ, ເຣເບກາເປັນລູກສາວຂອງ
ເບທູເອນ,ລູກຂອງມີລະກາ, ເມຍຂອງນາໂຮ,ຜູ້ທີ່ເປັນນ້ອງຊາຍຂອງອັບຣາຮາມ.16ຍິງສາວນັ້ນສວຍງາມຫລາຍ ແລະເປັນຍິງບໍຣິສຸດ.
ຍັງບໍ່ມີຜູ້ຊາຍຄົນໃດໄດ້ຫລັບນອນກັບນາງ. ນາງໄດ້ລົງມາທີ່ນ້ຳພຸຕັກນ້ຳໃສ່ຈົນເຕັມໄຫຂອງນາງ, ແລະກັບຄືນເມືອ.
17ຄົນຮັບໃຊ້ນັ້ນຈຶ່ງໄດ້ແລ່ນໄປຫານາງ ແລະເວົ້າວ່າ,"ຂ້ອຍຂໍນ້ຳຈາກໄຫຂອງເຈົ້າໃຫ້ເຮົາດື່ມແດ່."18ນາງໄດ້ຕອບວ່າ,"ຈົ່ງດື່ມເຖີດ,
ເຈົ້ານາຍຂອງຂ້ອຍ" ແລະນາງກໍໄດ້ປົ່ງໄຫນ້ຳລົງຈາກບ່າ, ແລະໃຫ້ລາວດື່ມ.
19ເມື່ອນາງໄດ້ໃຫ້ລາວດື່ມອີ່ມແລ້ວ, ນາງຈຶ່ງເວົ້າວ່າ, "ຂ້ອຍຈະຕັກນ້ຳໃຫ້ໂຕອູດຂອງທ່ານ, ຈົນກວ່າພວກມັນຈະກິນອີ່ມຫມົດທຸກ
ໂຕ."20ດັ່ງນັ້ນນາງຈຶ່ງຟ້າວຖອກນ້ຳໃນໄຫນ້ຳຂອງນາງລົງໃນຮາງນ້ຳ ແລະຟ້າວແລ່ນໄປຕັກມາຖອກໃສ່ອີກ, ແລະຕັກນ້ຳສຳລັບອູດ
ທັງຫມົດຂອງເຂົາ.
21ຜູ້ຊາຍຄົນນັ້ນຢືນເບິ່ງນາງຢ່າງງຽບໆເພື່ອຢາກຈະຮູ້ວ່າ ພຣະຢາເວໄດ້ຊົງເຮັດໃຫ້ການເດີນທາງຂອງເຂົາປະສົບຄວາມສຳເລັດຫລືບໍ່.22ເມື່ອ
ພວກອູດໄດ້ກິນນ້ຳອີ່ມແລ້ວ, ຄົນຮັບໃຊ້ນັ້ນໄດ້ນຳເອົາແຫວນຄຳສຳລັບໃສ່ດັງຂອງນາງ, ແລະເອົາປອກແຂນຄຳຄູ່ຫນຶ່ງສຳລັບໃສ່ແຂນຂອງ
ນາງອອກມາ.23ແລະໄດ້ເວົ້າວ່າ,"ເຈົ້າເປັນລູກສາວຂອງໃຜ? ຂໍກະລຸນາ, ບອກຂ້ອຍແດ່ວ່າທີ່ບ້ານພໍ່ຂອງເຈົ້າມີບ່ອນພັກ
ທີ່ຈະໃຫ້ເຮົາໄດ້ພັກຄ້າງຄືນແດ່ບໍ?"
24ນາງໄດ້ຕອບເຂົາວ່າ, "ຂ້ອຍເປັນລູກສາວຂອງເບທູເອນ. ລູກຊາຍຂອງມີລະກາ, ຜູ້ທີ່ນາງໄດ້ເກີດໃຫ້ແກ່ນາໂຮ."25ນາງໄດ້ບອກເຂົາອີກດ້ວຍວ່າ,
"ເຮົາມີທັງເຟືອງເຂົ້າ, ແລະອາຫານຫລວງຫລາຍສຳລັບສັດ, ແລະຫ້ອງສຳລັບໃຫ້ທ່ານພັກຄ້າງຄືນດ້ວຍ."
26ຜູ້ຊາຍນັ້ນຈຶ່ງໄດ້ໂຄ້ງຄຳນັບ ແລະນະມັດສະການພຣະຢາເວ.27ລາວເວົ້າວ່າ, "ສັນຣະເສີນແດ່ພຣະຢາເວ, ພຣະເຈົ້າຂອງອັບຣາຮາມ,ເຈົ້ານາຍ
ຂອງຂ້ານ້ອຍ ຜູ້ບໍ່ຊົງປະຖິ້ມພັນທະສັນຍາທີ່ສັດຊື່ ແລະຫນ້າເຊື່ອຖືໄດ້ຂອງພຣະອົງຕໍ່ເຈົ້ານາຍຂອງຂ້ານ້ອຍ. ສຳລັບຂ້ານ້ອຍ, ພຣະຢາເວໄດ້
ຊົງນຳຂ້ານ້ອຍມາເຖິງບ້ານຍາດຕິພີ່ນ້ອງທັງຫລາຍຂອງເຈົ້ານາຍຂອງຂ້ານອັຍ."
28ຍິງສາວນັ້ນຈຶ່ງໄດ້ແລ່ນໄປຫາ ແລະບອກໃຫ້ຄົວເຮືອນຂອງແມ່ນາງກ່ຽວກັບສິ່ງເຫລົ່ານີ້ທັງຫມົດ.29ຂະນະນັ້ນເຣເບກາມີອ້າຍຄົນຫນຶ່ງ,
ແລະເຂົາຊື່ລາບານ. ລາບານໄດ້ແລ່ນໄປຫາຜູ້ຊາຍຄົນນັ້ນ ຜູ້ຢູ່ທີ່ຖະຫນົນທາງໄປນ້ຳພຸ.30ເມື່ອເຂົາໄດ້ເຫັນແຫວນໃສ່ດັງ
ແລະກຳໄລເທິງແຂນນ້ອງສາວຂອງເຂົາ, ແລະເມື່ອເຂົາໄດ້ຍິນເລື່ອງຂອງເຣເບການ້ອງສາວຂອງເຂົາ,"ນີ້ຄືສິ່ງທີ່ຜູ້ຊາຍຄົນນັ້ນ, ແລະ, ເບິ່ງເຖີດ,
ເຂົາກຳລັງຢືນຢູ່ຂ້າງຝູງອູດທີ່ນ້ຳພຸ.
31ລາບານຈຶ່ງໄດ້ເວົ້າວ່າ,"ມາເຖີດ, ທ່ານຄືພຣະພອນຂອງພຣະຢາເວ. ເປັນຫຍັງທ່ານຈຶ່ງຢືນຢູ່ຂ້າງນອກ? ເຮົາໄດ້ຈັດຕຽມບ້ານ, ແລະທີ່ພັກ
ສຳລັບໂຕອູດຂອງທ່ານດ້ວຍ."32ຜູ້ຊາຍຄົນນັ້ນໄປທີ່ບ້ານ ແລະນຳຂອງລົງຈາກຫລັງອູດທັງຫລາຍ, ພວກອູດໄດ້ເຟືອງກັບຫຍ້າໃຫ້ກິນ, ແລະ
ນ້ຳໄດ້ຖືກຈັດຕຽມໄວ້ສຳລັບລ້າງຕີນຂອງເຂົາແລະຕີນຂອງພວກຜູ້ຊາຍທີ່ມານຳລາວ.
33ພວກເຂົາໄດ້ຈັດອາຫານມາຕ້ອນຮັບລາວ, ເພື່ອໃຫ້ລາວກິນ ແຕ່ລາວໄດ້ເວົ້າວ່າ, "ຂ້ອຍຈະບໍ່ກິນຈົນກວ່າຂ້ອຍຈະໄດ້ເວົ້າໃນສິ່ງທີ່ຂ້ອຍຕ້ອງເວົ້າ
," ດັ່ງນັ້ນ ລາບານຈຶ່ງໄດ້ເວົ້າວ່າ,"ເຊີນເວົ້າມາເທາະ."34ລາວໄດ້ເວົ້າວ່າ, "ຂ້ອຍເປັນຄົນຮັບໃຊ້ຂອງອັບຣາຮາມ.35ພຣະຢາເວໄດ້ຊົງອວຍພອນ
ອັບຣາຮາມເຈົ້ານາຍຂອງຂ້ອຍຢ່າງຫລວງຫລາຍ. ແລະທ່ານເປັນຜູ້ຍິ່ງໃຫຍ່. ພຣະອົງໄດ້ປຣະທານຝູງຄົນ ແລະຝູງສັດລ້ຽງ, ເງິນ ແລະຄຳ ຄົນ
ຮັບໃຊ້ທັງຊາຍ ແລະຍິງ ແລະອູດແລະລໍຢ່າງຫລວງຫລາຍແກ່ທ່ານ.


generated on Tue Jun 17 19:01:42 2025

36ຊາຣາເມຍຂອງນາຍຂອງຂ້ອຍ, ມີລູກຊາຍຜູ້ຫນຶ່ງ ແກ່ເຈົ້ານາຍຂອງຂ້ອຍ ເມື່ອນາງມີອາຍຸຫລາຍແລ້ວ, ແລະທ່ານໄດ້ມອບທຸກສິ່ງທຸກຢ່າງ
ທີ່ທ່ານເປັນເຈົ້າຂອງໃຫ້ລາວ. 37ນາຍຂອງຂ້ອຍ, ໃຫ້ຂ້ອຍສາບານວ່າ, "ເຈົ້າ
ຕ້ອງບໍ່ຫາເມຍໃຫ້ລູກຊາຍຂອງເຮົາຈາກບັນດາລູກສາວທັງຫລາຍຂອງຊາວການາອານ, ຊຶ່ງເຮົາໄດ້ອາໄສຢູ່ໃນແຜ່ນດິນຂອງພວກເຂົາ. 38ແຕ່
ເຈົ້າ, ຕ້ອງໄປຫາຄອບຄົວຂອງພໍ່ເຮົາ, ແລະຍາດພີ່ນ້ອງຂອງເຮົາ, ແລະຫາເມຍໃຫ້ລູກຊາຍຂອງເຮົາ."
39ຂ້ອຍໄດ້ເວົ້າກັບເຈົ້ານາຍຂອງຂ້ອຍວ່າ, "ບາງທີຍິງນັ້ນຈະບໍ່ຕິດຕາມຂ້ອຍມາ." 40ແຕ່ທ່ານໄດ້ເວົ້າກັບຂ້ອຍວ່າ, "ພຣະຢາເວ, ອົງທີ່ຂ້ອຍເຊື່ອຟັງ
ຕະຫລອດມານັ້ນ, ຈະສົ່ງທູດສະຫວັນຂອງພຣະອົງໄປກັບເຈົ້າ ແລະພຣະອົງຈະຊົງເຮັດໃຫ້ທາງຂອງເຈົ້າປະສົບຄວາມສຳເລັດ. ດັ່ງນັ້ນເຈົ້າ
ຫາເມຍໃຫ້ລູກຊາຍຂອງເຮົາຈາກທ່າມກາງຍາດຂອງເຮົາ ແລະຈາກເຊື້ອສາຍຄອບຄົວຂອງພໍ່ເຮົາ. 41ແຕ່ເຈົ້າຈະເປັນອິສະຫລະຈາກຄຳສາບານ
ຂອງເຮົາ ຖ້າເຈົ້າມາເຖິງຍາຕຂອງເຮົາ ແລະພວກເຂົາບໍ່ໃຫ້ນາງແກ່ເຈົ້າ. ດັ່ງນັ້ນ ເຈົ້າຈະເປັນອິສະຫລະຈາກຄຳສາບານຂອງເຮົາ."
42ດັ່ງນັ້ນວັນນີ້ຂ້ອຍໄດ້ມາເຖິງນ້ຳພຸ, ແລະໄດ້ເວົ້າວ່າ, "ຂ້າແດ່ພຣະຢາເວ, ພຣະເຈົ້າຂອງອັບຣາຮາມ, ຂອງເຈົ້ານາຍຂອງຂ້ານ້ອຍ, ກາລຸນາເຖີດ,
ຖ້າພຣະອົງຊົງປາຖະຫນາທີ່ຈະເຮັດໃຫ້ການເດີນທາງຂອງຂ້ານ້ອຍປະສົບຄວາມສຳເລັດ. 43ຂ້ານ້ອຍຢູ່ທີ່ນີ້, ກຳລັງຢືນຢູ່ທີ່ແຄມນ້ຳພຸ. ຂໍໃຫ້ມີຍິງ
ສາວທີ່ອອກມາຕັກນ້ຳ ຂ້ານ້ອຍຈະເວົ້າກັບນາງວ່າ, ຂ້ານ້ອຍຂໍດື່ມນ້ຳຈາກໄຫຂອງນາງ." 44ຜູ້ຍິງນັ້ນທີ່ຈະເວົ້າກັບຂ້ອຍວ່າ, "ຈົ່ງດື່ມເຖີດ, ແລະ
ຂ້ອຍຈະເອົານ້ຳໃຫ້ອູດທັງຫລາຍຂອງທ່ານກິນດ້ວຍ ຂໍໃຫ້ນາງເປັນຜູ້ຍິງຜູ້ທີ່ພຣະອົງ ພຣະຢາເວ,ໄດ້ຊົງເລືອກໃຫ້ເປັນເມຍລູກຊາຍຂອງ
ເຈົ້ານາຍຂອງຂ້ານ້ອຍ."
45ເບິ່ງເຖີດ ເຣເບກາໄດ້ອອກມາພ້ອມກັບໄຫໃສ່ນ້ຳຂອງນາງ ແລະນາງໄດ້ລົງມາທີ່ນ້ຳພຸ. ແລະຕັກນ້ຳຂ້ອຍຈຶ່ງໄດ້ເວົ້າກັບນາງວ່າ,
"ກະລຸນາໃຫ້ນ້ຳດື່ມແກ່ຂ້ອຍແດ່ທ້ອນ." 46ນາງຈຶ່ງເອົາໄຫນ້ຳຂອງນາງລົງຈາກບ່າຂອງນາງທັນທີ, ແລະເວົ້າວ່າ, "ຈົ່ງດື່ມເຖີດ, ແລະຂ້ອຍຈະເອົາ
ນ້ຳໃຫ້ຝູງອູດຂອງທ່ານດ້ວຍ." ດັ່ງນັ້ນ ຂ້ອຍຈຶ່ງດື່ມນ້ຳ, ແລະນາງໄດ້ຕັກນ້ຳໃຫ້ຝູງອູດກິນດ້ວຍ.
47ຂ້ອຍໄດ້ຖາມນາງ ແລະເວົ້າວ່າ,"ເຈົ້າເປັນລູກສາວຂອງໃຜ?" ນາງໄດ້ຕອບວ່າ, "ລູກສາວຂອງເບທູເອນ, ລູກຊາຍຂອງນາໂຮ,
ຜູ້ຊຶ່ງມີລະກາເປັນຜູ້ເກີດໃຫ້ແກ່ເຂົາ." ຂ້ອຍຈຶ່ງໄດ້ໃສ່ແຫວນທີ່ດັງຂອງນາງ ແລະເອົາສາຍແຂນໃສ່ໃຫ້ນາງ. 48ຈາກນັ້ນຂ້ອຍໄດ້ໂນ້ມຕົວລົງ
ແລະນະມັດສະການພຣະຢາເວ, ແລະສັນຣະເສີນພຣະຢາເວ, ພຣະເຈົ້າຂອງອັບຣາຮາມ,ເຈົ້ານາຍຂອງຂ້ອຍ, ຜູ້ໄດ້ຊົງນຳຂ້ອຍ
ມາຖືກທາງໃຫ້ໄດ້ມາພົບລູກສາວຍາຕຂອງເຈົ້ານາຍຂອງຂ້ອຍ ສຳລັບລູກຊາຍຂອງນາຍຂ້ອຍ.
49ມາບັດນີ້, ຖ້າທ່ານໄດ້ຈັດຕຽມທີ່ຈະປະຕິບັດຕໍ່ເຈົ້ານາຍຂອງຂ້ອຍ ດ້ວຍຄວາມສັດຊື່ຂອງຄອບຄົວ ແລະຄວາມໄວ້ວາງໃຈທີ່ຊົງຄຸນຄ່າ ກາລຸນາ
ບອກຂ້ອຍດ້ວຍເຖີດ. ແຕ່ຖ້າ,ບໍ່ກໍໃຫ້ບອກມາ ເພື່ອທີ່ຂ້ອຍ,ຈະຄວນຫັນໄປທາງຂວາ, ຫລືໄປທາງຊ້າຍ."
50ຈາກນັ້ນລາບານ ແລະເບທູເອນໄດ້ຕອບແລະເວົ້າວ່າ, "ສິ່ງນີ້ໄດ້ມາຈາກພຣະຢາເວ, ເຮົາບໍ່ສາມາດກ່າວແກ່ທ່ານ, ບໍ່ວ່າດີຫລືບໍ່ດີ. 51ເບິ່ງເຖີດ,
ເຣເບກາຢູ່ຕໍ່ຫນ້າທ່ານແລ້ວ. ຈົ່ງຮັບນາງ ແລະໄປເຖີດ, ແລະນາງຄວນຈະເປັນເມຍຂອງລູກຊາຍຂອງເຈົ້ານາຍຂອງທ່ານ, ຕາມທີ່ພຣະຢາເວໄດ້
ກ່າວໄວ້."
52ເມື່ອຄົນຮັບໃຊ້ຂອງອັບຣາຮາມໄດ້ຍິນຖ້ອຍຄຳຂອງພວກເຂົາ, ລາວໄດ້ໂນ້ມຕົວລົງເຖິງພື້ນຕໍ່ພຣະຢາເວ. 53ແລ້ວຄົນຮັບໃຊ້ ກໍເອົາໄດ້ນຳເອົ
າເຄື່ອງເງິນ ແລະ ຄຳ, ແລະ ເສື້ອຜ້າ, ແລະ ໄດ້ມອບໃຫ້ແກ່ນາງເຣເບກາ. ລາວຍັງໄດ້ເອົາຂອງຂວັນລາຄາແພງໃຫ້ອ້າຍ ແລະ ແມ່ຂອງນາງອີກ
ດ້ວຍ.
54ຈາກນັ້ນເພິ່ນ ແລະພວກຜູ້ຊາຍທີ່ຢູ່ກັບເຂົາໄດ້ກິນ ແລະດື່ມ. ພວກເຂົາພັກຄ້າງຄືນທີ່ນັ້ນ, ແລະເມື່ອພວກເພິ່ນຕື່ນຂຶ້ນມາໃນຕອນເຊົ້າ, ເພິ່ນໄດ້
ເວົ້າວ່າ,"ຈົ່ງສົ່ງຂ້ອຍກັບເມືອຫາເຈົ້ານາຍຂອງຂ້ອຍເຖີດ." 55ອ້າຍຂອງນາງ ແລະແມ່ຂອງນາງໄດ້ເວົ້າວ່າ, "ຈົ່ງໃຫ້ນາງຢູ່ກັບພວກເຮົາອີກຈັກ
ສອງສາມວັນຢ່າງຫນ້ອຍສິບວັນ, ຫລັງຈາກນັ້ນກໍຄ່ອຍໃຫ້ນາງໄປບໍ່ໄດ້ບໍ."
56ແຕ່ເພິ່ນໄດ້ເວົ້າກັບພວກເຂົາວ່າ, "ຢ່າຫນ່ວງຫນ່ຽວຂ້ອຍໄວ້ເລີຍ, ເພາະວ່າພຣະຢາເວຊົງເຮັດໃຫ້ທາງຂອງຂ້ອຍສຳເລັດ.
ຂໍສົ່ງຂ້ອຍໄປຕາມທາງຂອງຂ້ອຍເພື່ອທີ່ຂ້ອຍຈະກັບເມືອຫານາຍຂອງຂ້ອຍ." 57ພວກເຂົາຕອບວ່າ, "ເຮົາຈະເອີ້ນຍິງສາວນັ້ນມາ ແລະຖາມເບິ່ງ
ນາງ" 58ດັ່ງນັ້ນ ພວກເຂົາຈຶ່ງເອີ້ນນາງເຣເບກາມາ ແລະຖາມນາງວ່າ, "ເຈົ້າຈະໄປກັບເພິ່ນບໍ?" ນາງຕອບວ່າ,"ຂ້ອຍຈະໄປ."
59ດັ່ງນັ້ນ ພວກເຂົາຈຶ່ງໄດ້ສົ່ງນ້ອງສາວຂອງພວກເຂົາຄື ນາງເຣເບກາ ໄປພ້ອມດ້ວຍຍິງຄົນຮັບໃຊ້ຂອງນາງ,
ໃນການເດີນທາງຂອງນາງກັບຄົນຮັບໃຊ້ຂອງອັບຣາຮາມ ແລະຜູ້ຊາຍຂອງລາວ. 60ພວກເຂົາໄດ້ອວຍພອນນາງເຣເບກາ, ແລະເວົ້າແກ່ນາງວ່າ,"
ນ້ອງສາວຂອງເຮົາຂໍໃຫ້ເຈົ້າເປັນແມ່ຂອງຄົນຫລາຍແສນ, ແລະໃຫ້ເຊື້ອສາຍຂອງເຈົ້າ ຍຶດຄອງປະຕູເມືອງ
ຂອງຄົນເຫລົ່ານັ້ນທີ່ກຽດຊັງພວກເຂົາ."
61ແລ້ວເຣເບກາໄດ້ລຸກຂຶ້ນ, ນາງແລະພວກຍິງຄົນໃຊ້ຂອງນາງໄດ້ຂີ່ນອູດ, ແລະຕິດຕາມຊາຍນັ້ນໄປ ຄົນຮັບໃຊ້ນັ້ນຈຶ່ງໄດ້ນຳເຣເບກາ,
ແລະໄປຕາມທາງຂອງເຂົາ. 62ຂະນະນັ້ນອີຊາກກຳລັງອາໄສຢູ່ໃນເນເກບ, ແລະເຂົາຫາກໍກັບມາຈາກເບເອີລາໄຮຣອຍ ເພາະໃນຕອນຄຳ.
63ອີຊາກໄດ້ອອກໄປທີ່ທົ່ງນາເພື່ອຕຶກຕອງເລື່ອງຕ່າງໆ. ເມື່ອເຂົາໄດ້ເງີຍຫນ້າຂຶ້ນເບິ່ງ ແລະເຫັນ, ເບິ່ງເຖີດມີອູດຫລາຍໂຕກຳລັງມາ. 64ເຣເບກາໄ
ດ້ຫລຽວເບິ່ງ, ແລະເມື່ອນາງໄດ້ເຫັນອີຊາກ ນາງກໍໄດ້ໂດດລົງຈາກຫລັງອູດ. 65ນາງໄດ້ເວົ້າກັບຄົນຮັບໃຊ້ນັ້ນວ່າ,"ຜູ້ຊາຍຄົນນັ້ນທີ່ກຳລັງຍ່າງໃນ
ທົ່ງນາ, ມາຫາພວກເຮົານັ້ນແມ່ນໃຜ?".
66ຄົນຮັບໃຊ້ໄດ້ຕອບວ່າ, "ນັ້ນຄືນາຍຂອງຂ້ອຍເອງ" ດັ່ງນັ້ນນາງຈຶ່ງຢິບຜ້າຄຸມຫນ້າ ແລະປິດຫນ້ານາງເອງ ຄົນຮັບໃຊ້ນັ້ນໄດ້
ເລົ່າທຸກສິ່ງທີ່ລາວໄດ້ເຮັດໃຫ້ອີຊາກຟັງ. 67ຈາກນັ້ນອີຊາກໄດ້ພານາງໄປທີ່ເຕັນ ຂອງຊາຣາແມ່ຂອງຕົນ ເຂົາໄດ້ຮັບນາງເຣເບກາໄວ້,
ແລະນາງໄດ້ເປັນເມຍຂອງເຂົາ, ແລະເຂົາໄດ້ຮັກນາງ. ດັ່ງນັ້ນ ອີຊາກໄດ້ຮັບການປອບໃຈຫລັງຈາກທີ່ແມ່ຂອງລາວໄດ້ເສຍຊີວິດ.


generated on Tue Jun 17 19:01:42 2025

25 [1]ອັບຣາຮາມໄດ້ມີເມຍອີກຄົນຫນຶ່ງ, ນາງຊື່ວ່າ ເກຕູຣາ.[2]ນາງໄດ້ເກີດລູກຊາຍຫລາຍຄົນໃຫ້ເພິ່ນດັ່ງນີ້: ຊີມຣານ, ໂຢກຊານ, ເມດານ,
ມີດີອານ, ອີຊະບາກ, ແລະຊູອາ.[3]ໂຢກຊານເປັນພໍ່ຂອງເຊບາ ແລະເດດານ, ເຊື້ອສາຍທັງຫລາຍຂອງເດດານຄື: ຄົນອັດຊູຣິມ, ຄົນເລຕູຊິມ,
ແລະຄົນເລອຸມມິມ.[4]ລູກຊາຍທັງຫລາຍຂອງມີດີອານຄື: ເອຟາ, ເອເຟ, ຮານົກ, ອາບີດາ, ແລະເອນດາອາ. ທັງຫມົດ
ເຫລົ່ານີ້ຄືເຊື້ອສາຍທັງຫລາຍຂອງນາງເກຕູຣາ.

[5]ອັບຣາຮາມໄດ້ຍົກສິ່ງທີ່ເຂົາເປັນເຈົ້າຂອງທັງຫມົດໃຫ້ກັບອີຊາກ.[6]ຢ່າງໃດກໍຕາມ, ໃນຂະນະທີ່ເພິ່ນຍັງມີຊີວິດຢູ່ໄປ, ເພິ່ນໄດ້ໃຫ້ສິ່ງຂອງ
ຫລາຍຢ່າງໃຫ້ແກ່ລູກຊາຍທັງຫລາຍ ທີ່ໄດ້ຈາກເມຍນ້ອຍຂອງເພິ່ນ ແລະໄດ້ສົ່ງພວກເຂົາໄປຍັງດິນແດນທາງທິດຕາເວັນອອກ,
ໄປຈາກອີຊາກລູກຊາຍຂອງເພິ່ນ.
[7]ເຫລົ່ານີ້ເປັນຊ່ວງເວລາແຫ່ງຊີວິດຂອງອັບຣາຮາມ ເຂົາມີອາຍຸທັງຫມົດ, 175 ປີ.[8]ອັບຣາຮາມກໍໄດ້ສິ້ນລົມຫາຍໃຈ ແລະຕາຍໃນຂະນະທີ່
ເຂົາແກ່ຫລາຍແລ້ວ, ເປັນຜູ້ເຖົ້າທີ່ມີອາຍຸຫລາຍ, ແລະເພິ່ນໄດ້ຖືກຮວບຮວມໄວ້ກັບຄົນທັງຫລາຍຂອງຕົນ.
[9]ອີຊາກ ແລະອິດຊະມາເອນ, ລູກຊາຍຂອງເພິ່ນໄດ້ຝັງສົບເພິ່ນໄວ້ ທີ່ຖ້ຳແຫ່ງມັກເປລາ, ໃນທົ່ງນາຂອງເອຟະໂຣນ ລູກຊາຍຂອງໂຊຮາຄົນຮິດຕີ,
ຊຶ່ງຢູ່ໃກ້ເມືອງມຳເຣ.[10]ທົ່ງນານີ້ອັບຣາຮາມໄດ້ຊື້ຈາກລູກຊາຍທັງຫລາຍຂອງຊາວຮິດຕີ. ອັບຣາຮາມໄດ້ຖືກຝັງໄວ້ທີ່ນັ້ນກັບຊາຣາເມຍຂອງເພິ່ນ.
[11]ພາຍຫລັງຈາກອັບຣາຮາມໄດ້ຕາຍໄປແລ້ວ, ພຣະເຈົ້າໄດ້ຊົງອວຍພອນອີຊາກລູກຊາຍຂອງເພິ່ນ, ແລະອີຊາກໄດ້ອາໄສຢູ່
ໃກ້ກັບເບເອີລາໄຮຣອຍ, ນ້ຳສ້າງຂອງພຣະເຈົ້າຜູ້ເຫັນຂ້ອຍ.
[12]ຕໍ່ໄປນີ້ເປັນເຊື້ອສາຍທັງຫລາຍຂອງອິດຊະມາເອນ, ລູກຊາຍຂອງອັບຣາຮາມ, ຜູ້ທີ່ນາງຮາກາຊາວອີຢີບ, ຍິງຮັບໃຊ້ຂອງນາງຊາຣາ ເກີດໃຫ້
ອັບຣາຮາມນັ້ນ.
[13]ເຫລົ່ານີ້ຄືລາຍຊື່ລູກຊາຍທັງຫລາຍຂອງອິດຊະມາເອນ, ຕາມລະດັບການເກີດ ຂອງພວກເຂົາຄື: ເນບາໂຢດ, ລູກຫົວປີຂອງອິດຊະມາເອນ,
ເກດາ, ອັດເບເອນ, ມິບສາມ,[14]ມີຊະມາ, ດູມາ, ມາສາ,[15]ຮາດັດ, ເຕມາ, ເຢຕູເຣ, ນາຟີດ, ແລະເກເດມາ.[16]ຄົນເຫລົ່ານີ້ເປັນ
ລູກຊາຍທັງຫລາຍຂອງອິດຊະມາເອນ, ແລະເຫລົ່ານີ້ເປັນລາຍຊື່ຂອງພວກເຂົາ, ໂດຍໄດ້ຖືຕາມຫມູ່ບ້ານທັງຫລາຍຂອງພວກເຂົາ,
ແລະໂດຍໄດ້ຖືຕາມການຕັ້ງຄ້າຍທັງຫລາຍຂອງພວກເຂົາ. ເຈົ້າຊາຍສິບສອງພະອົງຕາມເຜົ່າທັງຫລາຍຂອງພວກເຂົາ.
[17]ເຫລົ່ານີ້ຄືປີທັງຫລາຍຂອງຊີວິດອິດຊະມາເອນຄື, 137 ປີ. ເຂົາໄດ້ຊິ້ນລົມຫາຍໃຈ, ແລະເສຍຊີວິດ
ແລະຖືກລວບລວມໄວ້ກັບພວກຄົນທັງຫລາຍຂອງເຂົາ.[18]ພວກເຂົາໄດ້ອາໄສຕັ້ງແຕ່ເມືອງຮາວີລາຈົນເຖິງຊູເຣ, ທີ່ຢູ່ໃກ້ປະເທດອີຢີບໄປທາງປະເທດ
ອັດຊີເຣຍ. ພວກເຂົາອາໄສຢູ່ຢ່າງບໍ່ເປັນມິດຕໍ່ກັນ ແລະກັນ.
[19]ນີ້ແມ່ນເລື່ອງລາວກ່ຽວກັບອີຊາກ, ລູກຊາຍຂອງອັບຣາຮາມ: ອັບຣາຮາມເປັນຜູ້ໃຫ້ກຳເນີດອີຊາກ.[20]ອີຊາກອາຍຸໄດ້ ສີ່ສິບ ປີ ເມື່ອເຂົາໄດ້
ເຣເບກາເປັນເມຍຂອງເຂົາ, ລູກສາວຂອງເບທູເອນ, ຄົນອາຣຳ, ຊາວເມືອງປັດດານອາຣຳ ແລະເປັນນ້ອງສາວຂອງລາບານ ຄົນອາຣຳ.
[21]ແລະ ພຣະຢາເວໄດ້ຊົງຕອບຄຳອະທິຖານຂອງເຂົາ, ແລະນາງເຣເບກາເມຍຂອງເຂົາຈຶ່ງຕັ້ງທ້ອງ.[22]ລູກຝາແຝດທັງສອງໄດ້ບຽດກັນຢູ່ໃນ
ທ້ອງຂອງນາງ, ແລະນາງໄດ້ເວົ້າວ່າ, "ເປັນຫຍັງສິ່ງນີ້ຈຶ່ງເກີດຂຶ້ນກັບຂ້ານ້ອຍ?" ນາງໄດ້ໄປແລະທູນຖາມພຣະຢາເວກ່ຽວກັບເລື່ອງນີ້.
[23]ພຣະເຈົ້າຢາເວໄດ້ຕອບກັບນາງວ່າ," ມີຄົນສອງຊົນຊາດຢູ່ໃນທ້ອງຂອງເຈົ້າ, ແລະ ທັງສອງຊົນຊາດຈະແຍກຈາກກັນໃນເຈົ້າ. ຊົນຊາດຫນຶ່ງຈະ
ແຂງແຮງກວ່າອີກຊົນຊາດຫນຶ່ງ, ແລະ ຄົນທີ່ມີອາຍຸຫລາຍກວ່າຈະຮັບໃຊ້ຜູ້ຄົນທີ່ມີອາຍຸນ້ອຍກວ່າ."
[24]ເມື່ອເຖິງກຳນົດເວລາສຳລັບ, ນາງໄດ້ທີ່ຈະເກີດລູກ, ເບິ່ງເຖີດມີເດັກຝາແຝດຢູ່ໃນທ້ອງຂອງນາງ.[25]ຜູ້ທີ່ອອກມາກ່ອນຕົວແດງແລະມີຂົນປົກຄຸມ
ເຕັມຕົວ. ພວກເພິ່ນຈຶ່ງໃສ່ຊື່ໃຫ້ເຂົາວ່າ ເອຊາວ.[26]ຫລັງຈາກນັ້ນ, ຜູ້ທີສອງໄດ້ອອກມາມືຈັບສົ້ນຫນ່ອງຂອງເອຊາວໄວ້. ເຂົາຈຶ່ງຖືກຕັ້ງຊື່ວ່າ
ຢາໂຄບ. ອີຊາກມີອາຍຸໄດ້ ຫົກສິບປີ. ເມື່ອເມຍຂອງເຂົາໄດ້ເກີດລູກຊາຍໃຫ້ເຂົາ.
[27]ພວກເດັກນັ້ນໄດ້ເຕີບໂຕຂຶ້ນມາ, ແລະເອຊາວກາຍເປັນນາຍພານທີ່ຊຳນິຊຳນານ, ຜູ້ຊາຍແຫ່ງທ້ອງທົ່ງ; ສ່ວນຢາໂຄບເປັນ
ຜູ້ຊາຍທີ່ງຽບໃຊ້ເວລາຂອງເຂົາຢູ່ໃນເຕັນ.[28]ອີຊາກຮັກເອຊາວເພາະເພິ່ນໄດ້ກິນຊີ້ນສັດທີ່ລາວຫາມາໄດ້, ແຕ່ເຣເບການັ້ນຮັກຢາໂຄບ.
[29]ມື້ຫນຶ່ງ ຢາໂຄບໄດ້ຕົ້ມອາຫານເອຊາວໄດ້ກັບມາຈາກທົ່ງນາ, ແລະເຂົາເມື່ອຍອ່ອນຈາກຄວາມຫິວ.[30]ເອຊາວໄດ້ເວົ້າກັບຢາໂຄບວ່າ, "ໃຫ້ຂ້ອຍ
ຂໍກິນແກງຫມາກຖົ່ວແດງຂອງເຈົ້າຈັກຄຳແດ່, ກາລຸນາເທາະເພາະຂ້ອຍຫມົດແຮງແລ້ວ!" ນີ້ຄືເຫດຜົນທີ່ເອີ້ນຊື່ເຂົາວ່າ ເອໂດມ.
[31]ຢາໂຄບຕອບວ່າ, "ຈົ່ງຂາຍສິດລູກຫົວປີຂອງເຈົ້າໃຫ້ຂ້ອຍກ່ອນ."[32]ເອຊາວໄດ້ເວົ້າວ່າ, "ເບິ່ງເທາະ, ຂ້ອຍຫິວໃກ້ຈະຕາຍຢູ່ແລ້ວ ສິດອ້າຍກົກ
ຈະມີປະໂຫຍດຫຍັງແກ່ຂ້ອຍ."[33]ຢາໂຄບຈຶ່ງຕອບວ່າ, "ກ່ອນອື່ນຈົ່ງສາບານໃຫ້ຂ້ອຍ" ດັ່ງນັ້ນເອຊາວຈຶ່ງໄດ້ກ່າວຄຳສັດຈະສາບານ ແລະ
ດ້ວຍວິທີນີ້ເຂົາໄດ້ຂາຍສິດລູກຫົວປີຂອງເຂົາໃຫ້ຢາໂຄບ.[34]ຢາໂຄບກໍເອົາເຂົ້າຈີ່ ແລະແກງຫມາກຖົ່ວແດງຕົ້ມໃຫ້ແກ່ເອຊາວ, ລາວໄດ້ກິນ ແລະ
ດື່ມຈາກນັ້ນກໍລຸກຂຶ້ນແລ້ວກໍຈາກໄປຕາມທາງຂອງເຂົາ. ໃນການນີ້ເອຊາວໄດ້ຫມິ່ນປະຫມາດສິດລູກຫົວປີຂອງເຂົາ.


generated on Tue Jun 17 19:01:42 2025

26 1ບັດນີ້ໄດ້ເກີດມີການອຶດຢາກອາຫານໃນແຜ່ນດິນ, ນອກເຫນືອໄປຈາກທີ່ເຄີຍເກີດຂຶ້ນຄັ້ງໃນສະໄຫມຂອງອັບຣາຮາມ. ອີຊາກຈຶ່ງໄປຫາ
ເຈົ້າອາບີເມເຫລັກ, ຜູ້ທີ່ເປັນກະສັດຂອງຊາວຟີລິດສະຕິນທີ່ເມືອງເກຣາກ.

2ພຣະຢາເວໄດ້ປາກົດແກ່ເຂົາແລະບອກເພິ່ນວ່າ, "ຢ່າລົງໄປຍັງອີຢິບ; ຈົ່ງຢູ່ໃນແຜ່ນດິນທີ່ເຮົາບອກໃຫ້ເຈົ້າອາໄສຢູ່. 3ຈົ່ງຢູ່ໃນແຜ່ນດິນແຫ່ງ
ນີ້ແຫລະ, ແລະເຮົາຈະຢູ່ນຳເຈົ້າ ແລະອວຍພອນເຈົ້າ, ສຳລັບເຈົ້າ ແລະເຊື້ອສາຍທັງຫລາຍຂອງເຈົ້າ, ເຮົາຈະໃຫ້ແຜ່ນດິນທັງຫມົດເຫລົ່ານີ້,
ແລະເຮົາຈະເຮັດໃຫ້ຄຳສັນຍາຊຶ່ງເຮົາໄດ້ໃຫ້ໄວ້ກັບອັບຣາຮາມ ພໍ່ຂອງເຈົ້ານັ້ນສຳເລັດ.
4ເຮົາຈະໃຫ້ເຊື້ອສາຍທັງຫລາຍຂອງເຈົ້າທະວີຫລາຍຂຶ້ນ ເຫມືອນດວງດາວທັງຫລາຍໃນທ້ອງຟ້າ, ແລະເຮົາຈະໃຫ້ດິນແດນເຫລົ່ານີ້ໃຫ້
ເຊື້ອສາຍທັງຫລາຍຂອງເຈົ້າ. ປະຊາຊາດທັງຫມົດຂອງແຜ່ນດິນນີ້ ຈະໄດ້ຮັບພຣະພອນຜ່ານທາງເຊື້ອສາຍທັງຫລາຍຂອງເຈົ້າ. 5ເຮົາຈະ
ເຮັດສິ່ງນີ້ເພາະອັບຣາຮາມ ໄດ້ເຊື່ອຟັງສຽງຂອງເຮົາ, ແລະຮັກສາຄຳສັ່ງສອນຂອງເຮົາ. ກົດບັນຍັດທັງຫລາຍຂອງເຮົາ,
ແລະທັມບັນຍັດທັງຫລາຍຂອງເຮົາ."
6ດັ່ງນັ້ນ ອີຊາກຈຶ່ງໄດ້ຕັ້ງຖິ່ນທີ່ເມືອງເກຣາກ. 7ເມື່ອຜູ້ຊາຍທັງຫລາຍຂອງສະຖານທີ່ນັ້ນຖາມເພິ່ນກ່ຽວກັບເມຍຂອງເພິ່ນ, ເພິ່ນຕອບວ່າ, "ນາງເປັນ
ນ້ອງສາວ." ເພິ່ນຢ້ານທີ່ຈະເວົ້າວ່າ, "ນາງເປັນເມຍຂອງຕົນ," ເພາະເພິ່ນໄດ້ຄິດວ່າ, "ຜູ້ຊາຍທັງຫລາຍຂອງສະຖານທີ່ນີ້ຈະຂ້າເພິ່ນ ເພື່ອເອົາ
ນາງເຣເບກາໄປ, ເພາະນາງສວຍງາມຫລາຍ." 8ຫລັງຈາກທີ່ອີຊາກອາໄສຢູ່ທີ່ນັ້ນເປັນເວລານານ, ກະສັດຂອງຊາວຟີລິດສະຕິນໄດ້ຫລຽວລົງມາ
ຈາກປ່ອງຢ້ຽມນີ້, ແລະພະອົງໄດ້ຊຶ່ງເຫັນອີຊາກກຳລັງກອດນາງເຣເບກາ, ເມຍຂອງຕົນຢູ່.
9ເຈົ້າອາບີເມເຫລັກໄດ້ຊຶ່ງເອີ້ນໃຫ້ອີຊາກມາເຂົ້າເຝົ້າພະອົງ ແລະເວົ້າວ່າ,"ເບິ່ງດູ, ນາງຕ້ອງເປັນເມຍຂອງເຈົ້າແທ້. ແຕ່ເປັນຫຍັງເຈົ້າຈຶ່ງເວົ້າວ່າ, "
ນາງເປັນນ້ອງສາວຂອງເຈົ້າ?" ອີຊາກໄດ້ຕອບພະອົງວ່າ,"ເພາະຂ້ານ້ອຍໄດ້ຄິດວ່າບາງຄົນອາດຈະຂ້າ ຂ້ານ້ອຍເພື່ອເອົານາງໄປ." 10
ອາບີເມເຫລັກໄດ້ກ່າວວ່າ, "ເຈົ້າໄດ້ເຮັດຫຍັງກັບເຮົາດັ່ງນີ້? ຜູ້ຊາຍຄົນໃດຫນຶ່ງຄົນອາດໄດ້ຫລັບນອນກັບເມຍຂອງເຈົ້າໄດ້ງ່າຍໆ, ແລະ ເຈົ້າ
ຈະນຳຄວາມຜິດມາຜິດສູ່ເຮົາ." 11ດັ່ງນັ້ນ ອາບີເມເຫລັກຈຶ່ງໄດ້ຊຶ່ງເຕືອນປະຊາຊົນທັງຫມົດ ແລະ ກ່າວວ່າ, "ຜູ້ໃດແຕະຕ້ອງຜູ້ຊາຍຄົນນີ້ຫລືເມຍ
ຂອງລາວ ຜູ້ນັ້ນຈະຕ້ອງຮັບໂທດເຖິງຕາຍ."
12ອີຊາກໄດ້ປູກພືດເທິງແຜ່ນດິນ ແລະ ເກັບກ່ຽວຜົນໃນປີດຽວກັນນັ້ນ, ຫນຶ່ງຮ້ອຍເພາະພຣະຢາເວໄດ້ຊຶ່ງອວຍພຣະພອນເພິ່ນ.
13ຊາຍຄົນນັ້ນໄດ້ກາຍເປັນຄົນຮັ່ງມີ, ແລະ ເພີ່ມຫລາຍຂຶ້ນ ແລະ ຫລາຍຂຶ້ນ ຈົນກະທັ້ງເພິ່ນໄດ້ກາຍເປັນຜູ້ຍິ່ງໃຫຍ່. 14ເພິ່ນໄດ້ມີຝູງແກະ, ແລະ
ຝູງສັດຫລວງຫລາຍ, ແລະ ມີຄົນຮັບໃຊ້ຫລາຍຄົນ. ຄົນຟີລິດສະຕິນຈຶ່ງອິດສາເພິ່ນ.
15ບັດນີ້ ບໍ່ນ້ຳທັງຫມົດ ທີ່ຄົນຮັບໃຊ້ທັງຫລາຍຂອງພໍ່ເພິ່ນໄດ້ຂຸດໄວ້ໃນສະໄຫມຂອງອັບຣາຮາມພໍ່ຂອງເພິ່ນ,
ພວກຄົນຟີລິດສະຕິນໄດ້ຖົມບໍ່ນ້ຳເຫລົ່ານີ້ດ້ວຍດິນ. 16ເຈົ້າອາບີເມເຫລັກໄດ້ບອກກັບອີຊາກວ່າ," ຈົ່ງໄປຈາກເຮົາເຖີດ, ເພາະເຈົ້າມີກຳລັງ
ຫລາຍກວ່າພວກເຮົາ." 17ດັ່ງນັ້ນ ອີຊາກຈຶ່ງໄດ້ໄປຈາກທີ່ນັ້ນ ແລະໄດ້ຕັ້ງຖິ່ນຖານຢູ່ໃນຮ່ອມພູຂອງເມືອງເກຣາກ, ແລະໄດ້ອາໄສຢູ່ທີ່ນັ້ນ.
18ອີກຄັ້ງຫນຶ່ງທີ່ອີຊາກໄດ້ຂຸດບໍ່ນ້ຳເກົ່າທີ່ພວກເຂົາໄດ້ຂຸດແລ້ວ, ໃນສະໄຫມຂອງອັບຣາຮາມພໍ່ຂອງເພິ່ນ. ແຕ່ຄົນຟີລິດສະຕິນໄດ້ຖົມບໍ່ນ້ຳ
ເຫລົ່ານັ້ນ ຫລັງການຕາຍຂອງອັບຣາຮາມ. ອີຊາກເອີ້ນຊື່ບໍ່ນ້ຳທັງຫລາຍນີ້ດ້ວຍຊື່ດຽວກັນຕາມທີ່ພໍ່ຂອງຕົນໄດ້ເອີ້ນມາແລ້ວ.
19ເມື່ອຄົນຮັບໃຊ້ທັງຫລາຍຂອງອີຊາກໄດ້ຂຸດບໍ່ນ້ຳທີ່ຮ່ອມພູ, ພວກເຂົາໄດ້ພົບບໍ່ນ້ຳທີ່ມີນ້ຳໄຫລ. 20ຄົນລ້ຽງສັດທັງຫລາຍຂອງຊາວເກຣາກ ໄດ້
ຖົກຖຽງກັນກັບຄົນລ້ຽງສັດຂອງອີຊາກ, ແລະເວົ້າວ່າ,"ບໍ່ນ້ຳນີ້ເປັນຂອງພວກເຮົາ." ດັ່ງນັ້ນ ອີຊາກຈຶ່ງໄດ້ເອີ້ນຊື່ບໍ່ນ້ຳນັ້ນວ່າ,"ທະເລາະກັບເຂົາ."
21ຈາກນັ້ນພວກເຂົາໄດ້ຂຸດບໍ່ນ້ຳອີກບໍ່ຫນຶ່ງ, ແລະພວກເຂົາກໍໄດ້ຖົກຖຽງກັນດ້ວຍບໍ່ນ້ຳນີ້ອີກ, ດັ່ງນັ້ນ ເພິ່ນຈຶ່ງໄດ້ໃສ່ຊື່ບໍ່ນ້ຳນີ້ວ່າ,"ສັດຕຣູ." 22ເພິ່ນ
ໄດ້ຈາກທີ່ນັ້ນໄປ ແລະໄດ້ຂຸດບໍ່ນ້ຳບໍ່ຫນຶ່ງອີກ, ແຕ່ພວກເຂົາບໍ່ໄດ້ມີການຖົກຖຽງກັນເລື່ອງບໍ່ນ້ຳບໍ່ນີ້. ດັ່ງນັ້ນ ເພິ່ນຈຶ່ງໄດ້ໃສ່ຊື່ບໍ່ນ້ຳນີ້ວ່າ,
"ອີສະຫລະພາບ." ແລະ ເພິ່ນໄດ້ເວົ້າວ່າ, "ບັດນີ້ ພຣະຢາເວໄດ້ໃຫ້ອິສະຫລະພາບແກ່ພວກເຮົາ, ແລະພວກເຮົາຈະຈະເລີນຮຸ່ງເຮືອງຂຶ້ນໃນ
ແຜ່ນດິນນີ້."
23ແລ້ວອີຊາກໄດ້ຂຶ້ນໄປຈາກທີ່ນັ້ນ ໄປຍັງເມືອງເບເອນເຊບາ. 24ພຣະຢາເວໄດ້ຊຶ່ງປາກົດແກ່ເພິ່ນ ໃນຄືນດຽວກັນນັ້ນ ແລະ ກ່າວວ່າ, "ເຮົາເປັນ
ພຣະເຈົ້າຂອງອັບຣາຮາມພໍ່ຂອງເຈົ້າ, ຢ່າຢ້ານເລີຍ, ເພາະເຮົາຢູ່ກັບເຈົ້າ, ແລະ ຈະອວຍພອນເຈົ້າ ແລະ ເຮັດໃຫ້ເຊື້ອສາຍ
ທັງຫລາຍຂອງເຈົ້າທະວີຫລາຍຂຶ້ນ, ເພາະເຫັນແກ່ອັບຣາຮາມຜູ້ຮັບໃຊ້ຂອງເຮົາ." 25ອີຊາກໄດ້ສ້າງແທ່ນບູຊາທີ່ນັ້ນ ແລະ ໄດ້ຮ້ອງອອກ
ພຣະນາມພຣະຢາເວ. ທີ່ນັ້ນເພິ່ນໄດ້ຕັ້ງເຕັນເພິ່ນ, ແລະ ຄົນຮັບໃຊ້ທັງຫລາຍຂອງເພິ່ນໄດ້ຂຸດບໍ່ນ້ຳຕື່ມອີກ.
26ຈາກເກຣາກດັ່ງນັ້ນອາບີເມເຫລັກພ້ອມກັບອາຮູຊາດ, ສະຫາຍຂອງເຂົາ, ແລະ ຟີໂກນ, ແມ່ທັບຂອງພະອົງໄດ້ໄປຫາເຂົາ. 27ອີຊາກ
ໄດ້ເວົ້າກັບພວກເຂົາວ່າ, "ພວກທ່ານມາຫາຂ້ານ້ອຍເຮັດຫຍັງໃນເມື່ອພວກທ່ານກຽດຊັງຂ້ານ້ອຍ ແລະ ຂັບໄລ່ຂ້ານ້ອຍອອກມາຈາກດິນແດນ
ຂອງທ່ານ?"
28ພວກເຂົາໄດ້ຕອບວ່າ,"ເຮົາໄດ້ເຫັນຢ່າງຊັດເຈນແລ້ວວ່າພຣະຢາເວ ຊົງສະຖິດຢູ່ກັບເຈົ້າ. ດັ່ງນັ້ນເຮົາຈຶ່ງໄດ້ຕັດສິນໃຈແລ້ວວ່າ ຄວນຈະໃຫ້ມີ
ການໃຫ້ສັດຈະສາບານລະຫວ່າງພວກເຮົາຄືລະຫວ່າງເຮົາກັບທ່ານ. ໃຫ້ເຮົາເຮັດພັນທະສັນຍາກັບທ່ານ, 29ທີ່ທ່ານຈະບໍ່ທຳຮ້າຍພວກເຮົາ
ເຊັ່ນດຽວກັນ, ເຮົາຈະບໍ່ທຳຮ້າຍທ່ານ, ແລະເຫມືອນທີ່ເຮົາໄດ້ດູແລທ່ານເປັນຢ່າງດີ. ແລະສົ່ງທ່ານຈາກມາຢ່າງສັນຕິ, ທ່ານເປັນຜູ້ທີ່ພຣະຢາເວ
ອວຍພຣະພອນຈິງໆ."
30ດັ່ງນັ້ນອີຊາກຈຶ່ງໄດ້ລ້ຽງອາຫານພວກເພິ່ນ, ແລະພວກເພິ່ນພາກັນກິນແລະດື່ມ. 31ພວກເຂົາໄດ້ຕື່ນແຕ່ເຊົ້າມືດ ແລະເຮັດຄຳສາບານຕໍ່ກັນ
ແລະກັນ. ຈາກນັ້ນອີຊາກໄດ້ສົ່ງພວກເພິ່ນໄປ, ແລະພວກເພິ່ນໄດ້ຈາກໄປຢ່າງສັນຕິ.
32ຄົນຮັບໃຊ້ຂອງອີຊາກໄດ້ມາ ແລະບອກເພິ່ນກ່ຽວກັບບໍ່ນ້ຳທີ່ພວກເຂົາໄດ້ຂຸດ. ພວກເຂົາກ່າວວ່າ,"ພວກເຮົາໄດ້ພົບນ້ຳແລ້ວ." 33ເພິ່ນໄດ້ໃສ່ຊື່
ບໍ່ນ້ຳນັ້ນວ່າ, "ສາບານ" ເມືອງນັ້ນຈຶ່ງຖືກເອີ້ນຊື່ວ່າເບເອນເຊບາ, ຈົນເຖິງທຸກວັນນີ້.
34ເມື່ອເອຊາວອາຍຸໄດ້ ສີ່ສິບປີ, ເຂົາໄດ້ມີເມຍຄື, ນາງຢູດິດ ລູກສາວຂອງເບເອຣີຄົນຮິດຕີ, ແລະນາງບາເສມາດ ລູກສາວຂອງເອໂລນຄົນຮິດຕີ.
35ພວກເຂົາໄດ້ນຳຄວາມໂສກເສົ້າມາສູ່ອີຊາກ ແລະນາງເຣເບກາ.


generated on Tue Jun 17 19:01:42 2025

27 1ເມື່ອອີຊາກໄດ້ແກ່ຕົວລົງ ແລະສາຍຕາກໍມືດມົວລົງ, ດັ່ງນັ້ນເພິ່ນຈຶ່ງບໍ່ສາມາດຫລຽວເຫັນສິ່ງໃດໄດ້, ເພິ່ນໄດ້ເອີ້ນເອຊາວລູກຊາຍກົກມາ,
ແລະເວົ້າກັບເຂົາວ່າ, "ລູກຊາຍຂອງເຮົາເອີຍ." ເຂົາໄດ້ຕອບກັບພໍ່ວ່າ, "ລູກຢູ່ທີ່ນີ້."2ເພິ່ນໄດ້ເວົ້າວ່າ, "ເບິ່ງດູ, ພໍ່ນີ້ເຖົ້າແກ່ຫລາຍແລ້ວ.
ພໍ່ບໍ່ຮູ້ວ່າຈະຕາຍເມື່ອໃດ.

3ດັ່ງນັ້ນ ຈົ່ງເອົາອາວຸດຂອງເຈົ້າ, ກະບອກໃສ່ລູກທະນູກັບທະນູຂອງເຈົ້າ, ແລະອອກໄປໃນທົ່ງທົ່ງແລະລ່າສັດມາໃຫ້ພໍ່.4ຈົ່ງເຮັດອາຫານແຊບໆ
ສຳລັບພໍ່, ອາຫານທີ່ພໍ່ມັກ, ແລະນຳມາໃຫ້ພໍ່ ດັ່ງນັ້ນພໍ່ຈະກິນອາຫານນັ້ນພໍ່ຈະອວຍພອນໃຫ້ເຈົ້າກ່ອນກ່ອນທີ່ພໍ່ຈະຕາຍ."
5ຂະນະນັ້ນເຣເບກາໄດ້ຍິນເລື່ອງລາວ ທີ່ອີຊາກໄດ້ເວົ້າກັບເອຊາວລູກຊາຍຂອງເຂົາ. ເອຊາວໄດ້ອອກໄປຍັງທົ່ງທົ່ງເພື່ອລ່າສັດ ແລະ ນຳກັບມາ.
6ເຣເບກາໄດ້ເວົ້າກັບຢາໂຄບລູກຊາຍຂອງນາງ ແລະ ເວົ້າວ່າ, "ນີ້ແຫລະ, ແມ່ໄດ້ຍິນພໍ່ຂອງເຈົ້າເວົ້າກັບເອຊາວອ້າຍຂອງເຈົ້າ. ເພິ່ນໄດ້ເວົ້າວ່າ,
7'ຈົ່ງນຳເນື້ອສັດ ແລະ ເຮັດອາຫານທີ່ແຊບໆໃຫ້ພໍ່, ເພື່ອທີ່ພໍ່ຈະກິນແລ້ວພໍ່ຈະອວຍພອນເຈົ້າຊ້ອງຫນ້າພຣະຢາເວກ່ອນທີ່ພໍ່ຈະຕາຍ.'
8ດັ່ງນັ້ນລູກຊາຍຂອງແມ່ເອີຍ, ຈົ່ງເຊື່ອຟັງຄຳຂອງແມ່, ທີ່ແມ່ສັ່ງເຈົ້າ.9ຈົ່ງໄປທີ່ຝູງສັດ, ແລະນຳແບ້ຫນຸ່ມທີ່ດີສອງໂຕມາໃຫ້ແມ່; ແລະ ແມ່ຈະເຮັດ
ອາຫານຢ່າງແຊບໆຈາກພວກແກະນັ້ນສຳລັບພໍ່ຂອງເຈົ້າ, ຢ່າງທີ່ເຂົາມັກ.10ເຈົ້າຈະນຳເອົາອາຫານນັ້ນໄປໃຫ້ພໍ່ຂອງເຈົ້າ, ເພື່ອໃຫ້ເຂົາກິນ,
ດັ່ງນັ້ນເຂົາຈະໄດ້ອວຍພອນເຈົ້າກ່ອນຄວາມຕາຍຂອງເຂົາຈະມາເຖິງ."
11ຢາໂຄບໄດ້ເວົ້າກັບເຣເບກາແມ່ຂອງເຂົາວ່າ, "ເບິ່ງເທາະ,ເອຊາວອ້າຍຂອງລູກເປັນຄົນມີຂົນດົກ, ແຕ່ລູກເປັນຄົນທີ່ຜິວກ້ຽງດີ.12ບາງທີພໍ່ອາດລູບ
ເບິ່ງລູກ, ແລະລູກຈະກາຍເປັນຄົນຫລອກລວງເພິ່ນ. ລູກຈະນຳຄຳສາບແຊ່ງມາສູ່ຕົວລູກບໍ່ແມ່ນຄຳອວຍພອນ."
13ແມ່ຂອງເຂົາໄດ້ເວົ້າກັບເຂົາວ່າ, "ລູກຊາຍຂອງເຮົາເອີຍ, ຄຳສາບແຊ່ງໃດໆນັ້ນໃຫ້ຕົກຖືກແມ່ເທາະ, ພຽງແຕ່ເຊື່ອຟັງຄຳຂອງແມ່, ແລະໄປ,
ຈົ່ງນຳເອົາແບ້ມາໃຫ້ແມ່."14ດັ່ງນັ້ນ ຢາໂຄບຈຶ່ງໄດ້ໄປ ແລະເອົາແບ້ຫນຸ່ມມາໃຫ້ແມ່ຂອງເຂົາ, ແລະແມ່ຂອງເຂົາໄດ້ເຮັດອາຫານອັນແຊບໆ,
ຢ່າງທີ່ພໍ່ຂອງເຂົາມັກ.
15ເຣເບກາໄດ້ນຳເອົາເສື້ອຜ້າທີ່ດີທີ່ສຸດຂອງເອຊາວ, ລູກຊາຍກົກຂອງນາງ, ຊຶ່ງຢູ່ກັບນາງໃນເຮືອນ, ແລະ ສວມໃຫ້ຢາໂຄບ,
ລູກຊາຍຄົນທີ່ສອງຂອງນາງໃສ່.16ນາງໄດ້ເອົາຫນັງຂອງແກະມາປົກເທິງມືຂອງເຂົາ ແລະ ເທິງສ່ວນທີ່ກ້ຽງຄືຊ່ວງຄໍຂອງເຂົາ.17ນາງເອົາອາຫານ
ອັນຫອມຫວນ ແລະ ເຂົ້າຈີ່ທີ່ນາງໄດ້ຕຽມໃສ່ມືລູກຊາຍຂອງນາງຄືຢາໂຄບຖືໄປ.
18ຢາໂຄບໄດ້ເຂົ້າໄປຫາພໍ່ຂອງເຂົາ ແລະເວົ້າວ່າ, "ພໍ່ຂອງຂ້ອຍ." ເພິ່ນຕອບວ່າ, "ລູກຊາຍຂອງເຮົາເອີຍ, ພໍ່ຢູ່ນີ້, ເຈົ້າເປັນລູກຄົນໃດຂອງ
ພໍ່?"19ຢາໂຄບໄດ້ຕອບພໍ່ຂອງເຂົາວ່າ,"ລູກເອງ ເອຊາວລູກຊາຍຄົນກົກຂອງທ່ານ; ລູກໄດ້ເຮັດຕາມສິ່ງທີ່ທ່ານໄດ້ບອກນັ້ນແລ້ວ.
ບັດນີ້ຂໍໃຫ້ທ່ານໄດ້ລຸກຂຶ້ນ ແລະກິນເນື້ອທີ່ລູກຫາມາ, ແລ້ວທ່ານຈະໄດ້ອວຍພອນລູກ."
20ອີຊາກຖາມລູກຊາຍຂອງເພິ່ນວ່າ, "ລູກຊາຍຂອງເຮົາເອີຍເປັນໄປໄດ້ຢ່າງໃດ, ທີ່ເຈົ້າສາມາດລ່າມັນໄດ້ໄວຢ່າງນີ້?" ເຂົາໄດ້ຕອບວ່າ,
"ເພາະວ່າພຣະຢາເວ ພຣະເຈົ້າຂອງທ່ານໄດ້ນຳມັນມາໃຫ້ລູກ."21ອີຊາກໄດ້ເວົ້າກັບຢາໂຄບວ່າ, "ລູກຊາຍຂອງເຮົາເອີຍ, ຈົ່ງມາໃກ້ໆພໍ່ເຖີດ,ເພື່ອ
ທີ່ພໍ່ຈະຮູ້ວ່າ ເຈົ້າແມ່ນລູກຊາຍຂອງພໍ່ຄືເອຊາວແທ້ຫລືບໍ່."
22ຢາໂຄບໄດ້ເຂົ້າໄປໃກ້ອີຊາກພໍ່ຂອງເຂົາ, ແລະອີຊາກໄດ້ລູບຄຳລາວ ແລະເວົ້າວ່າ, "ສຽງນັ້ນຄືສຽງຂອງຢາໂຄບ ແຕ່ມືເປັນມືຂອງ
ເອຊາວ."23ອີຊາກຈື່ເຂົາບໍ່ໄດ້, ເພາະມືຂອງເຂົາມີຂົນຄືກັບມືຂອງເອຊາວອ້າຍຂອງເຂົາ, ດັ່ງນັ້ນອີຊາກຈຶ່ງໄດ້ອວຍພອນເຂົາ.
24ແຕ່ເພິ່ນໄດ້ເວົ້າວ່າ, "ເຈົ້າຄືເອຊາວລູກຊາຍຂອງເຮົາແທ້ບໍ?" ເຂົາໄດ້ຕອບວ່າ, "ແມ່ນແທ້."25ອີຊາກຈຶ່ງກ່າວວ່າ, "ຈົ່ງເອົາອາຫານມາໃຫ້ພໍ່,
ແລະພໍ່ຈະກິນເນື້ອທີ່ເຈົ້າຫາມາ, ແລ້ວພໍ່ຈະອວຍພອນເຈົ້າ." ຢາໂຄບຈຶ່ງເອົາອາຫານມາໃຫ້ເພິ່ນ. ອີຊາກໄດ້ກິນ, ແລະຢາໂຄບໄດ້ເອົາເຫລົ້າ
ອະງຸ່ນມາໃຫ້ເພິ່ນ, ແລະເພິ່ນກໍໄດ້ດື່ມ.
26ຈາກນັ້ນອີຊາກພໍ່ຂອງເຂົາໄດ້ເວົ້າກັບເຂົາວ່າ, "ລູກຊາຍຂອງເຮົາເອີຍ ບັດນີ້ຈົ່ງເຂົ້າມາໃກ້ໆພໍ່,ແລະຈູບພໍ່."27ຢາໂຄບໄດ້ເຂົ້າມາໃກ້, ແລະຈູບເ
ພິ່ນ ແລະເພິ່ນກໍໄດ້ກິ່ນເຄື່ອງນຸ່ງຂອງເຂົາ, ແລະອວຍພອນເຂົາ, "ເພິ່ນໄດ້ເວົ້າ, ວ່າກິ່ນລູກຊາຍຂອງຂ້ອຍນີ້ ຄືກິ່ນທີ່ມາຈາກທົ່ງນາ ທີ່ພຣະຢາເວ
ໄດ້ສົ່ງພອນລົງມາໃຫ້.
28ຂໍໃຫ້ພຣະເຈົ້າປຣະທານສ່ວນທີ່ມີນ້ຳຄ້າງແຫ່ງທ້ອງຟ້າແລະສ່ວນທີ່ອຸດົມສົມບູນຂອງແຜ່ນດິນແລະຕົ້ນເຂົ້າ ທັງເຫລົ້າອະງຸ່ນໃຫມ່
ຫລວງຫລາຍ.
29ໃຫ້ປະຊາຊົນທັງຫລາຍຮັບໃຊ້ເຈົ້າ ແລະປະຊາຊາດທັງຫລາຍໂຄ້ງຄຳນັບໃຫ້ແກ່ເຈົ້າ. ເປັນເຈົ້ານາຍເຫນືອພີ່ນ້ອງທັງຫລາຍຂອງເຈົ້າ,
ແລະຂໍໃຫ້ລູກຊາຍທັງຫລາຍຂອງແມ່ເຈົ້າ. ໂຄ້ງຄຳນັບໃຫ້ແກ່ເຈົ້າຂໍໃຫ້ທຸກ ຄົນທີ່ສາບແຊ່ງເຈົ້າຖືກສາບແຊ່ງ; ຂໍໃຫ້ທຸກຄົນທີ່ອວຍພອນເຈົ້າໄດ້
ຮັບການອວຍພຣະພອນ."
30ທັນທີທີ່ອີຊາກອວຍພອນຢາໂຄບແລ້ວ, ແລະຢາໂຄບເກືອບຈະກັບອອກໄປຈາກອີຊາກພໍ່ຂອງເຂົາເກືອບບໍ່ທັນ, ເອຊາວອ້າຍຂອງເຂົາກໍກັບມາແຕ່
ລ່າສັດ.31ລາວກໍໄດ້ເຮັດອາຫານອັນແຊບໆ ແລະນຳມາໃຫ້ພໍ່ລາວ. ລາວໄດ້ເວົ້າກັບພໍ່ຂອງລາວວ່າ, "ພໍ່ເອີຍ, ຂໍໃຫ້ທ່ານລຸກຂຶ້ນ ແລະກິນ
ສິ່ງທີ່ລູກຊາຍຂອງທ່ານໄດ້ລ່າມາ, ເພື່ອທີ່ທ່ານຈະໄດ້ອວຍພອນລູກ."
32ອີຊາກພໍ່ຂອງເຂົາໄດ້ເວົ້າກັບເຂົາວ່າ, "ເຈົ້າແມ່ນໃຜ?" ລາວຕອບວ່າ, "ລູກຄືລູກຊາຍຂອງທ່ານເອຊາວ, ລູກຊາຍກົກຂອງທ່ານ."33ອີຊາກຈຶ່ງ
ຕົກໃຈທັງສັ່ນຫມົດຕົວ ແລະໄດ້ເວົ້າວ່າ, "ມັນເປັນໃຜທີ່ໄດ້ໄປລ່າສັດ ແລະຈັດແຈ່ງອາຫານເອົາມາໃຫ້ພໍ່ກິນ? ພໍ່ໄດ້ກິນ ແລະນຳມາໃຫ້ພໍ່?
ພໍ່ໄດ້ກິນມັນຫມົດກ່ອນທີ່ເຈົ້າໄດ້ເຂົ້າມາ, ແລະພໍ່ໄດ້ອວຍພອນເຂົາໄປແລ້ວ, ເຂົາໄດ້ຮັບການອວຍພອນ."
34ເມື່ອເອຊາວໄດ້ຍິນຖ້ອຍຄຳທັງຫລາຍຂອງພໍ່ລາວ, ລາວຈຶ່ງຮ້ອງໄຫ້ດ້ວຍສຽງອັນດັງ ແລະ ຂົມຂື່ນ, ແລະ ເວົ້າກັບພໍ່ຂອງລາວວ່າ,
"ຂໍອວຍພອນລູກ, ຈົ່ງອວຍພອນລູກເຫມືອນກັນແດ່ທ້ອນ."35ອີຊາກໄດ້ເວົ້າວ່າ, "ນ້ອງຊາຍຂອງເຈົ້າໄດ້ມາທີ່ນີ້ຢ່າງມີເລ້ຫລ່ຽມ ແລະ ເອົາ
ຄຳອວຍພອນຂອງເຈົ້າຄວນຈະໄດ້ໄປແລ້ວ."
36ເອຊາວໄດ້ເວົ້າວ່າ, "ຜູ້ທີ່ເຮັດບໍ່ຖືກຕ້ອງນີ້ຄືຢາໂຄບບໍ່ແມ່ນບໍ?" ເພາະເຂົາໄດ້ຫລອກລວງລູກຢ່າງນີ້ສອງເທື່ອແລ້ວ. ເຂົາໄດ້ເອົາສິດທິລູກກົກ
ຂອງລູກໄປ, ແລະ,ບັດນີ້ເຂົາໄດ້ເອົາຄຳອວຍພອນຂອງລູກໄປອີກ." ຈາກນັ້ນເຂົາໄດ້ເວົ້າວ່າ, "ທ່ານບໍ່ມີຄຳອ່ວຍພອນຈັກຢ່າງເຫລືອໄວ້ໃຫ້ລູກອີກ
ແດ່ບໍ?"37ອີຊາກໄດ້ຕອບລາວ ແລະເວົ້າກັບເອຊາວວ່າ, "ເບິ່ງເຖີດ, ພໍ່ໄດ້ອວຍພອນເຂົາເປັນເຈົ້ານາຍຂອງເຈົ້າ, ແລະພໍ່ໄດ້ໃຫ້ພີ່ນ້ອງ
ທັງຫມົດຂອງເຂົາເປັນຄົນຮັບໃຊ້ເຂົາ. ພໍ່ໄດ້ອວຍພອນລາວໃຫ້ມີເຂົ້າ, ແລະມີເຫລົ້າອະງຸ່ນໃຫມ່ແກ່ເຂົາ. ລູກຊາຍຂອງພໍ່ເອີຍ ພໍ່ຈະ
ສາມາດເຮັດສິ່ງໃດຫລາຍກວ່ານີ້ສຳລັບເຈົ້າໄດ້ບໍ?"


generated on Tue Jun 17 19:01:42 2025

38ເອຊາວໄດ້ເວົ້າກັບພໍ່ຂອງເພິ່ນວ່າ, "ພໍ່ເອີຍ ທ່ານບໍ່ມີຄຳອວຍພອນເຫລືອສຳລັບລູກ, ອີກຈັກຄຳອວຍພອນບໍ? ພໍ່ຂອງລູກຂໍອວຍພອນລູກ,
ອວຍພອນລູກແດ່ທ້ອນ." ເອຊາວໄດ້ຮ້ອງໄຫ້ສຽງດັງ.
39ອີຊາກພໍ່ຂອງເພິ່ນໄດ້ຕອບ ແລະ ເວົ້າກັບເພິ່ນວ່າ, "ເບິ່ງເຖີດ, ສະຖານທີ່ໆເຈົ້າຢູ່ຈະຢູ່ຫ່າງໄກຈາກຄວາມອຸດົມສົມບູນ ແລະ
ຮັ້ງມີຂອງແຜ່ນດິນ; ເຈົ້າຈະຂາດຄວາມຊຸ່ມເຢັນທີ່ສະຫວັນໂຜດໃຫ້. 40ເຈົ້າຈະມີຊີວິດຢູ່ໄດ້ດ້ວຍດາບຂອງເຈົ້າ, ແລະ ເຈົ້າຈະຮັບໃຊ້ນ້ອງຊາຍ
ຂອງເຈົ້າ. ແຕ່ເມື່ອເຈົ້າກະບົດ, ເຈົ້າຈະປົດແອກຂອງເຂົາອອກຈາກຄໍຂອງເຈົ້າໄດ້."
41ເອຊາວໄດ້ກຽດຊັງຢາໂຄບ ເພາະຄຳອວຍພອນທີ່ພໍ່ຂອງເພິ່ນໄດ້ໃຫ້ແກ່ເຂົາ. ເອຊາວໄດ້ເວົ້າໃນໃຈຂອງເພິ່ນວ່າ,
"ວັນເວລາແຫ່ງຄວາມໂສກເສົ້າສຳລັບພໍ່ຂອງເຮົາ ກຳລັງເຂົ້າມາໃກ້; ຫລັງຈາກນັ້ນ ເຮົາກໍຈະຂ້ານ້ອງຊາຍຂອງເຮົາຄືຢາໂຄບ." 42ຖ້ອຍຄຳຂອງ
ເອຊາວ ລູກຊາຍກົກຂອງນາງໄດ້ຖືກນຳມາບອກໃຫ້ເຣເບກາຮູ້. ດັ່ງນັ້ນນາງຈຶ່ງໄດ້ໃຊ້ຄົນໄປ ແລະເອີ້ນຢາໂຄບລູກຊາຍຜູ້ເປັນນ້ອງມາ ແລະ
ເວົ້າກັບເຂົາວ່າ, "ເບິ່ງເຖີດ, ອ້າຍຂອງເຈົ້າເອຊາວກຳລັງປອບໃຈຕົວເອງກ່ຽວກັບເຈົ້າໂດຍການວາງແຜນທີ່ຈະຂ້າເຈົ້າ.
43ບັດນີ້, ລູກຊາຍຂອງແມ່ເອີຍ, ຈົ່ງເຊື່ອຟັງແມ່ ແລະຫນີໄປຫາລາບານ, ອ້າຍຂອງແມ່ທີ່ເມືອງຮາຣານ. 44ຈົ່ງຢູ່ກັບເຂົາຊົ່ວໄລຍະຫນຶ່ງ, ຈົນກວ່າ
ຄວາມໂກດຮ້າຍຂອງອ້າຍເຈົ້າຈະລົດລົງ, 45ຈົນກວ່າຄວາມໂກດຮ້າຍຂອງອ້າຍເຈົ້າຫັນໄປຈາກເຈົ້າ, ແລະເຂົາລືມໃນສິ່ງທີ່ເຈົ້າໄດ້ກະທຳແກ່ເຂົາ.
ຈາກນັ້ນແມ່ຈະໃຊ້ຄົນໄປແລະຮັບເຈົ້າກັບຄືນມາຈາກທີ່ນັ້ນ. ເປັນຫຍັງແມ່ຕ້ອງສູນເສຍພວກເຈົ້າທັງສອງຄົນໃນມື້ດຽວກັນ?"
46ນາງເຣເບກາໄດ້ເວົ້າກັບອີຊາກວ່າ, "ຂ້ອຍເບື່ອຊີວິດເພາະລູກສາວທັງຫລາຍຂອງຊາວຮິດຕີ. ຖ້າຢາໂຄບຮັບເອົາລູກສາວຂອງຊາວຮິດຕີ
ຄົນໃດຄົນຫນຶ່ງ, ມາເປັນເມຍເຫມືອນຜູ້ຍິງເຫລົ່ານີ້, ລູກສາວຂອງແຜ່ນດິນນີ້ບາງຄົນ, ຊີວິດຂອງຂ້ອຍຈະມີປະໂຫຍດຫຍັງ."

 generated on Tue Jun 17 19:01:42 2025

28 1ອີຊາກໄດ້ເອີ້ນຢາໂຄບ, ເຂົ້າມາເພື່ອອວຍພອນ, ແລະສັ່ງເຂົາວ່າ, "ລູກຢ່າເອົາຍິງສາວຊາວການາອານມາເປັນເມຍ.2ແຕ່ຈົ່ງລຸກຂຶ້ນ,
ໄປປັດດານອາຣຳ, ໄປຍັງບ້ານຂອງເບທູເອນພໍ່ຂອງແມ່ເຈົ້າ, ແລະຮັບເອົາເມຍຄົນຫນຶ່ງຈາກທີ່ນັ້ນ, ຈາກລູກສາວຄົນໃດຄົນຫນຶ່ງຂອງ
ລາບານອ້າຍຂອງແມ່ເຈົ້າ.

3ຂໍໃຫ້ພຣະເຈົ້າອົງຊົງຣິດອຳນາດຊົງອວຍພອນເຈົ້າ, ເຮັດໃຫ້ເຈົ້າມີລູກຢ່າງຫລວງຫລາຍ, ເພື່ອເຈົ້າຈະໄດ້ເປັນບັນພະບຸຣຸດຂອງຫລາຍຊົນຊາດ.
4ຂໍໃຫ້ພຣະອົງປຣະທານຄຳອວຍພອນຂອງອັບຣາຮາມແກ່ເຈົ້າ, ແລະແກ່ບັນດາເຊື້ອສາຍທັງຫລາຍຂອງເຈົ້າ, ຫລັງຈາກເຈົ້າ ເຈົ້າຈະໄດ້ເປັນ
ກຳມະສິດດິນແດນທີ່ເຈົ້າອາໄສຢູ່, ຊຶ່ງພຣະເຈົ້າໄດ້ມອບໃຫ້ແກ່ອັບຣາຮາມເປັນມໍຣະດົກ."
5ດັ່ງນັ້ນອີຊາກໄດ້ສົ່ງຢາໂຄບໄປ. ຢາໂຄບໄດ້ໄປຍັງປັດດານອາຣຳ, ໄປຫາລາບານລູກຊາຍຂອງເບທູເອນຊາວອາຣຳ, ເປັນອ້າຍຂອງນາງ
ເຣເບກາ, ແມ່ຂອງຢາໂຄບ ແລະເອຊາວ.
6ບັດນີ້ເອຊາວໄດ້ເຫັນອີຊາກອວຍພອນຢາໂຄບ ແລະສົ່ງເຂົາໄປຍັງປັດດານອາຣຳ, ເພື່ອຫາເມຍຈາກທີ່ນັ້ນ. ລາວໄດ້ເຫັນອີຊາກອວຍພອນເຂົາ
ແລະສັ່ງເຂົາເວົ້າວ່າ, "ເຈົ້າບໍ່ຕ້ອງເອົາຍິງສາວຊາວການາອານມາເປັນເມຍດ້ວຍ."7ເອຊາວຍັງໄດ້ເຫັນວ່າຢາໂຄບເຊື່ອຟັງພໍ່
ແລະແມ່ຂອງເຂົາດ້ວຍ, ແລະໄດ້ເດີນທາງໄປທີ່ປັດດານອາຣຳ.
8ເອຊາວໄດ້ເຫັນວ່າອີຊາກພໍ່ຂອງຕົນບໍ່ມັກຍິງສາວການາອານ.9ດັ່ງນັ້ນ ລາວຈຶ່ງໄປຫາອິດຊະມາເອນ, ແລະຮັບເອົານາງມາຮາລາດນ້ອງສາວຂອງ
ເນບາໂຢດ, ລູກສາວຂອງອິດຊະມາເອນ, ຜູ້ເປັນລູກຊາຍຂອງອັບຣາຮາມ, ມາເປັນເມຍຂອງເຂົາອີກຄົນຫນຶ່ງ,
ນອກເຫນືອຈາກເມຍທັງຫລາຍທີ່ເຂົາມີຢູ່ແລ້ວ.
10ຢາໂຄບໄດ້ອອກຈາກເມືອງເບເອນເຊບາ ແລະມຸ່ງຫນ້າໄປສູ່ເມືອງຮາຣານ.11ເຂົາໄດ້ມາເຖິງທີ່ແຫ່ງຫນຶ່ງ ແລະພັກທີ່ນັ້ນທັງຄືນ,
ເພາະວ່າຕາເວັນຕົກດິນແລ້ວ. ເຂົາໄດ້ເອົາກ້ອນຫີນກ້ອນຫນຶ່ງຈາກທີ່ນັ້ນມາເຮັດເປັນຫມອນຮອງຫົວ, ແລະນອນລົງໃນທີ່ນັ້ນເພື່ອທີ່ຈະຫລັບ.
12ເຂົາໄດ້ຝັນເຫັນຂັ້ນໄດຕັ້ງຂຶ້ນເທິງແຜ່ນດິນ.ປາຍຂອງຂັ້ນໄດນັ້ນຂຶ້ນໄປເຖິງທ້ອງຟ້າ ແລະ ຫມູ່ທູດສະຫວັນຂອງພຣະເຈົ້າກຳລັງຍ່າງຂຶ້ນຍ່າງລົງ
ຕາມຂັ້ນໄດນັ້ນ.13ເບິ່ງເຖີດ, ພຣະຢາເວໄດ້ ຊົງຢືນຢູ່ຂ້າງເທິງນັ້ນ ແລະກ່າວວ່າ, "ເຮົາແມ່ນພຣະຢາເວ, ພຣະເຈົ້າຂອງອັບຣາຮາມ
ບັນພະບູຣຸດຂອງເຈົ້າ, ແລະພຣະເຈົ້າຂອງອີຊາກ. ແຜ່ນດິນທີ່ເຈົ້າກຳລັງນອນຢູ່ນີ້ເຮົາຈະມອບໃຫ້ເຈົ້າ ແລະບັນດາເຊື້ອສາຍຂອງເຈົ້າ.
14ເຊື້ອສາຍທັງຫລາຍຂອງເຈົ້າຈະມີຫລວງຫລາຍດັ່ງຂີ້ຝຸ່ນດິນ, ແລະເຈົ້າຈະແຜ່ກວ້າງໄກອອກໄປຍັງທິດຕາເວັນຕົກ, ທິດຕາເວັນອອກ,
ທິດເຫນືອ, ແລະທິດໃຕ້, ໂດຍຜ່ານທາງເຈົ້າ ແລະ ບັນດາເຊື້ອສາຍຂອງເຈົ້າທຸກຄອບຄົວຂອງແຜ່ນດິນຈະໄດ້ຮັບພອນ.15ເບິ່ງເຖີດ, ເຮົາຈະຢູ່
ກັບເຈົ້າ, ແລະ ເຮົາຈະປົກປັກຮັກສາເຈົ້າ ບໍ່ວ່າເຈົ້າຈະໄປທີ່ໃດ ເຮົາຈະໃຫ້ເຈົ້າກັບມາຢູ່ໃນດິນແດນນີ້; ເພາະວ່າເຮົາຈະບໍ່ປະຖິ້ມເຈົ້າ. ເຮົາຈະ
ເຮັດທຸກສິ່ງທີ່ເຮົາໄດ້ສັນຍາໄວ້ກັບເຈົ້າ."
16 ຢາໂຄບໄດ້ຕື່ນຂຶ້ນຈາກການຫລັບຂອງເຂົາຈຶ່ງເວົ້າວ່າ, "ພຣະຢາເວສະຖິດຢູ່ທີ່ນີ້ແທ້ໆ, ແລະເຮົາບໍ່ຮູ້ເລື່ອງມາກ່ອນ."17ເຂົາຢ້ານກົວແລະໄດ້
ເວົ້າວ່າ, "ບ່ອນນີ້ຫນ້າຢ້ານ! ທີ່ນີ້ບໍ່ແມ່ນຢ່າງອື່ນແນ່ນອນ ນອກຈາກເປັນພຣະວິຫານຂອງພຣະເຈົ້າ. ແລະຄົງເປັນປະຕູແຫ່ງທ້ອງຟ້າ."
18ຢາໂຄບລຸກຂຶ້ນແຕ່ເຊົ້າໆ ແລະນຳເອົາກ້ອນຫີນທີ່ເຂົາຫນູນຫົວນັ້ນມາເຂົາໄດ້ຕັ້ງມັນຂຶ້ນເປັນເຫມືອນເສົາ. ແລ້ວເທນ້ຳມັນ
ລົງເທິງຍອດກ້ອນຫີນນັ້ນ.19ເຂົາຈຶ່ງໄດ້ເອີ້ນສະຖານທີ່ນັ້ນວ່າເບັດເອນ. ແຕ່ກ່ອນເມືອງນີ້ຊື່ວ່າ, ລູເຊ.
20 ຢາໂຄບກໍໄດ້ສາບານວ່າ, "ຖ້າພຣະເຈົ້າຊົງສະຖິດຢູ່ກັບຂ້ານ້ອຍ ແລະປົກປັກຮັກສາຂ້ານ້ອຍໃນທາງນີ້ທີ່ຂ້ານ້ອຍກຳລັງຈະເດີນ, ແລະຈະໃຫ້
ອາຫານແກ່ຂ້ານ້ອຍກິນ, ແລະເສື້ອຜ້າສຳລັບສວມໃສ່,21ແລະຊົງນຳຂ້ານ້ອຍກັບມາເຖິງບ້ານພໍ່ຂອງຂ້ານ້ອຍຢ່າງປອດໄພ, ຈາກນັ້ນພຣະຢາເວ
ຈະເປັນພຣະເຈົ້າຂອງຂ້ານ້ອຍ.22ແລະກ້ອນຫີນນີ້ທີ່ຂ້ານ້ອຍໄດ້ຕັ້ງຂຶ້ນເປັນເຫມືອນເສົານີ້. ຈະເປັນກ້ອນຫີນທີ່ສັກສິດ
ຈາກທຸກສິ່ງທີ່ພຣະອົງປຣະທານໃຫ້ຂ້ານ້ອຍ, ແລະຂ້ານ້ອຍຈະຖວາຍຫນຶ່ງສ່ວນສິບໃຫ້ພຣະອົງ."


generated on Tue Jun 17 19:01:42 2025

29 [1]ຈາກນັ້ນຢາໂຄບໄດ້ເດີນທາງຕໍ່ໄປ ແລະມາເຖິງດິນແດນຂອງປະຊາຊົນແຫ່ງຕາເວັນອອກ.[2]ເມື່ອເຂົາໄດ້ຫລຽວເບິ່ງ, ເຂົາໄດ້ເຫັນບໍ່
ນ້ຳບໍ່ຫນຶ່ງທີ່ທົ່ງນາ, ແລະ, ເບິ່ງເຖີດ, ມີແກະສາມຝູງກຳລັງນອນຢູ່ໃກ້ໆບໍ່ນ້ຳນັ້ນ. ພວກເຂົາໄດ້ໃຊ້ນ້ຳຈາກບໍ່ນ້ຳນັ້ນລ້ຽງຝູງ, ແລະມີຫີນ
ກ້ອນໃຫຍ່ອັດປາກບໍ່ນ້ຳນັ້ນ.[3]ເມື່ອຝູງແກະທັງຫມົດໄດ້ມາໂຮມກັນທີ່ນັ້ນ, ຄົນລ້ຽງແກະຈຶ່ງພາກັນກິ້ງກ້ອນຫີນອອກ ຈາກປາກບໍ່ນ້ຳ ແລະຕັກນ້ຳ
ໃຫ້ແກະກິນ. ແລ້ວຈາກນັ້ນກໍກິ້ງກ້ອນຫີນນັ້ນອັດປາກບໍ່ນ້ຳໄວ້ອີກຄັ້ງ ໃຫ້ກັບໄປໃນທີ່ເກົ່າ.

[4]ຢາໂຄບໄດ້ເວົ້າກັບພວກເຂົາວ່າ, "ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ, ພວກທ່ານມາຈາກໃສ?" ພວກເຂົາໄດ້ຕອບວ່າ, "ພວກເຮົາມາ
ຈາກເມືອງຮາຣານ."[5]ລາວໄດ້ເວົ້າກັບພວກເຂົາວ່າ, "ພວກເຈົ້າຮູ້ຈັກລາບານ ລູກຊາຍນາໂຮບໍ?" ພວກເຂົາຕອບວ່າ, "ພວກເຮົາຮູ້ຈັກເພິ່ນ."[6]ລາວ
ໄດ້ເວົ້າກັບພວກເຂົາວ່າ, "ເພິ່ນສະບາຍດີບໍ?" ພວກເຂົາໄດ້ຕອບວ່າ, "ເພິ່ນສະບາຍດີ, ແລະຫັ້ນເດ, ຣາເຊັນລູກສາວຂອງເພິ່ນກຳລັງ
ມາກັບຝູງແກະນັ້ນ."
[7]ຢາໂຄບໄດ້ເວົ້າວ່າ, “ເບິ່ງແມ, ມັນເປັນເວລາທ່ຽງວັນຢູ່. ແລະບໍ່ແມ່ນຍາມນຳຝູງສັດມາລວມກັນ. ພວກທ່ານຄວນຕັກນ້ຳໃຫ້ແກະ
ແລະຈາກນັ້ນກໍນຳໄປໃຫ້ພວກມັນໄດ້ກິນຫຍ້າ?"[8]ພວກເຂົາໄດ້ເວົ້າວ່າ,"ພວກເຮົາບໍ່ສາມາດຕັກນ້ຳໃຫ້ພວກມັນ ໄດ້ຈົນກວ່າຝູງ
ສັດທັງຫມົດຈະມາລວມຕົວກັນ. ຈາກນັ້ນພວກຜູ້ຊາຍທັງຫລາຍຈະກິ້ງກ້ອນຫີນອອກຈາກປາກບໍ່ນ້ຳ, ແລະເຮົາຈະຕັກນ້ຳໃຫ້ແກະນັ້ນ."
[9]ໃນເວລາທີ່ຢາໂຄບຍັງກຳລັງເວົ້າຢູ່ກັບພວກເຂົາ, ນາງຣາເຊັນໄດ້ມາພ້ອມກັບຝູງແກະຂອງພໍ່ນາງ, ເພາະນາງໄດ້ກຳລັງລ້ຽງພວກມັນ.
[10]ເມື່ອຢາໂຄບໄດ້ເຫັນຣາເຊັນ, ລູກສາວຂອງລາບານ, ອ້າຍຂອງແມ່ລາວ, ແລະແກະຂອງລາບານ, ຂອງອ້າຍຂອງແມ່ເຂົາ, ຢາໂຄບໄດ້ເຂົ້າມາ,
ກິ້ງກ້ອນຫີນອອກຈາກປາກບໍ່ນ້ຳ, ແລະຕັກນ້ຳໃຫ້ຝູງສັດຂອງລາບານ, ອ້າຍຂອງແມ່ລາວ.
[11]ຢາໂຄບໄດ້ຈູບຣາເຊັນພ້ອມທັງຮ້ອງໄຫ້ສຽງດັງ.[12]ຢາໂຄບໄດ້ບອກຣາເຊັນວ່າ, "ເຂົາເປັນຍາດພີ່ນ້ອງຂອງນາງ,
ແລະເຂົາເປັນລູກຊາຍຂອງນາງເຣເບກາ." ຈາກນັ້ນນາງໄດ້ແລ່ນໄປ ແລະໄດ້ບອກກັບພໍ່ຂອງຕົນ.
[13]ເມື່ອລາບານໄດ້ຍິນເລື່ອງກ່ຽວກັບ ຢາໂຄບ ລູກຊາຍຂອງນ້ອງສາວເພິ່ນມາ, ເພິ່ນໄດ້ແລ່ນໄປພົບເຂົາ,ສວມກອດເຂົາ, ຈູບເຂົາ, ແລະໄດ້ພາ
ເຂົາໄປຍັງເຮືອນຂອງເພິ່ນ. ຢາໂຄບໄດ້ບອກລາບານເຖິງເລື່ອງເຫລົ່ານີ້ທັງຫມົດ.[14]ລາບານໄດ້ເວົ້າກັບເຂົາວ່າ,"ແທ້ຈິງແລ້ວເຈົ້າຄືກະດູກຂອງເຮົາ
ແລະເນື້ອຂອງເຮົາ." ຈາກນັ້ນຢາໂຄບໄດ້ຢູ່ກັບເຂົາປະມານຫນຶ່ງເດືອນ.
[15]ຈາກນັ້ນລາບານໄດ້ເວົ້າກັບຢາໂຄບວ່າ, "ເຈົ້າບໍ່ຄວນຮັບໃຊ້ເຮົາລ້າໆ ເພາະວ່າເຈົ້າເປັນຍາດພີ່ນ້ອງຂອງເຮົາບໍ່ແມ່ນບໍ? ຈົ່ງບອກເຮົາ,
ເຈົ້າຕ້ອງການ ອັນໃດເປັນຄ່າຈ້າງຂອງເຈົ້າ?"[16]ຂະນະນັ້ນລາບານມີລູກສາວສອງຄົນ. ຜູ້ກົກຊື່ວ່າ ເລອາ, ແລະຜູ້ນ້ອງນັ້ນຊື່ວ່າ ຣາເຊັນ.[17]ນາງ
ເລອາເປັນຄົນມີແວວຕາສັ້ນ, ແຕ່ນາງຣາເຊັນເປັນຄົນທີ່ມີຮູບຮ່າງແລະຫນ້າຕາສວຍງາມ.[18]ຢາໂຄບກໍໄດ້ຮັກນາງຣາເຊັນ, ດັ່ງນັ້ນເຂົາຈຶ່ງເວົ້າວ່າ,
"ຂ້ອຍຈະເຮັດວຽກໃຫ້ທ່ານເຈັດປີ ເພື່ອລາເຊັນ,ລູກສາວຄົນນ້ອຍຂອງທ່ານ."
[19]ລາບານໄດ້ເວົ້າວ່າ, "ມັນດີກວ່າທີ່ເຮົາຍົກນາງໃຫ້ກັບເຈົ້າ, ແທນທີ່ເຮົາຈະຍົກໃຫ້ກັບອີກຄົນຫນຶ່ງ. ຈົ່ງຢູ່ກັບເຮົາເຖີດ."[20]ສະນັ້ນ ຢາໂຄບຈຶ່ງໄດ້
ທຳງານຮັບໃຊ້ເຈັດປີເພື່ອນາງຣາເຊັນ; ແລະເບິ່ງມັນເຫມືອນເປັນພຽງບໍ່ເທົ່າໃດມື້, ສຳລັບເຂົາເພາະຄວາມຮັກທີ່ເຂົາມີຕໍ່ນາງ.
[21]ຈາກນັ້ນຢາໂຄບໄດ້ເວົ້າກັບລາບານວ່າ,"ຈົ່ງໃຫ້ເມຍແກ່ຂອ້ຍເຖີດ, ເພາະຂ້ອຍໄດ້ທຳງານຄົບຕາມເວລາແລ້ວ ດັ່ງນັ້ນຂ້ອຍຄວນແຕ່ງງານກັບ
ນາງ."[22]ດັ່ງນັ້ນ ລາບານໄດ້ຮວບຮວມຜູ້ຊາຍທັງຫມົດຂອງສະຖານທີ່ນັ້ນ ແລະຈັດງານລ້ຽງຂຶ້ນ.
[23]ໃນຕອນແລງນັ້ນ, ລາບານໄດ້ນຳເອົາ, ນາງເລອາລູກສາວຂອງເຂົາມາ ແລະ ນຳນາງໄປໃຫ້ຢາໂຄບ, ຜູ້ຊຶ່ງໄດ້ຫລັບນອນກັບນາງ.[24]ລາບານ
ໄດ້ໃຫ້ຍິງຮັບໃຊ້ຂອງເຂົາຄືຊິລະປາແກ່ເລອາ, ລູກສາວຂອງເຂົາໃຫ້ເປັນຄົນຮັບໃຊ້ຂອງນາງ.[25]ໃນຕອນເຊົ້າ, ເບິ່ງເຖີດ, ກາຍເປັນເລອາ! ຢາໂຄບ
ໄດ້ເວົ້າກັບລາບານວ່າ, "ເປັນຫຍັງທ່ານຈຶ່ງເຮັດກັບຂ້ອຍແບບນີ້? ຂ້ອຍໄດ້ຮັບໃຊ້ທ່ານເພື່ອຣາເຊັນບໍ່ແມ່ນບໍ? ເປັນຫຍັງທ່ານຈຶ່ງຫລອກລວງ
ຂ້ອຍ?"
[26]ລາບານໄດ້ຕອບວ່າ, "ມັນບໍ່ແມ່ນທຳນຽມຂອງເຮົາ ທີ່ຈະໃຫ້ລູກສາວຄົນນ້ອຍເອົາຜົວກ່ອນລູກສາວຜູ້ເອື້ອຍ.[27]ໃຫ້
ຄົບເຈັດວັນຂອງການແຕ່ງງານຂອງລູກສາວຄົນນີ້ກ່ອນ, ແລະເຮົາຈະຍົກອີກຄົນຫນຶ່ງໃຫ້ເຈົ້າດ້ວຍ ແລະຕອບແທນໃນການຮັບໃຊ້ເຮົາອີກເຈັດ
ປີ."
[28]ຢາໂຄບໄດ້ທຳຢ່າງນັ້ນ, ແລະຈົນຄົບເຈັດວັນຂອງເລອາ. ຈາກນັ້ນລາບານໄດ້ມອບນາງຣາເຊັນໃຫ້ເຂົາ
ລູກສາວຂອງເຂົາໃຫ້ເປັນເມຍຂອງເຂົາດ້ວຍ.[29]ລາບານໄດ້ໃຫ້ນາງບິນຮາແກ່ຣາເຊັນ, ລູກສາວຂອງເຂົາ ໃຫ້ເປັນຄົນຮັບໃຊ້ຂອງນາງ.
[30]ດັ່ງນັ້ນຢາໂຄບໄດ້ຫລັບນອນກັບນາງຣາເຊັນດ້ວຍ ແຕ່ເຂົາໄດ້ຮັກຣາເຊັນຫລາຍກວ່າຮັກເລອາ. ແລະຢາໂຄບໄດ້ຮັບໃຊ້ລາບານເປັນເວລາອີກ
ເຈັດປີ.
[31]ນາງເລອາບໍ່ໄດ້ເປັນທີ່ຮັກດັ່ງນັ້ນ ພຣະອົງໄດ້ຊົງເປີດຄັນຂອງນາງ, ແຕ່ນາງຣາເຊັນນັ້ນບໍ່ມີລູກ.[32]ນາງເລອາໄດ້ຕັ້ງທ້ອງຖືພາ ແລະ ເກີດລູກຊາຍ
ຄົນຫນຶ່ງ. ແລະ ນາງໄດ້ເອີ້ນຊື່ເຂົາວ່າຣູເບັນ. ເພາະນາງໄດ້ເວົ້າວ່າ, "ເພາະວ່າພຣະຢາເວໄດ້ຊົງຫລຽວເຫັນຄວາມລຳບາກຂອງຂ້ອຍ; ບັດນີ້
ຜົວຂອງຂ້ອຍຈະຮັກຂ້ອຍ."
[33]ຈາກນັ້ນນາງໄດ້ຕັ້ງທ້ອງອີກ ແລະເກີດລູກຊາຍອີກຄົນຫນຶ່ງ. ນາງເວົ້າວ່າ, "ເພາະວ່າພຣະຢາເວຮູ້ວ່າຂ້ອຍບໍ່ໄດ້ເປັນທີ່ຮັກ
ດັ່ງນັ້ນພຣະອົງໄດ້ປຣະທານລູກຊາຍຄົນນີ້ແກ່ຂ້ອຍດ້ວຍ," ແລະນາງໄດ້ເອີ້ນຊື່ເຂົາວ່າ ຊີເມໂອນ.[34]ຈາກນັ້ນນາງກໍໄດ້ຕັ້ງທ້ອງອີກຄັ້ງ. ແລະອອກ
ລູກຊາຍອີກຄົນຫນຶ່ງ. ນາງໄດ້ເວົ້າວ່າ, "ບັດນີ້ ເວລານີ້ຜົວຂອງຂ້ອຍຈະຕິດພັນຢູ່ກັບຂ້ອຍ, ເພາະວ່າຂ້ອຍໄດ້ເກີດລູກຊາຍເຖິງສາມຄົນ
ແກ່ລາວ." ດັ່ງນັ້ນເຂົາຈຶ່ງຖືກເອີ້ນຊື່ວ່າ ເລວີ.
[35]ນາງໄດ້ຕັ້ງທ້ອງອີກຄັ້ງ ແລະໄດ້ລູກຊາຍອີກຄົນຫນຶ່ງ. ນາງໄດ້ເວົ້າວ່າ,"ຄັ້ງນີ້ຂ້ອຍຈະສັນຣະເສີນພຣະຢາເວ." ສະນັ້ນ ນາງຈຶ່ງເອີ້ນຊື່ເຂົາວ່າ
ຢູດາ; ຈາກນັ້ນນາງໄດ້ຢຸດການມີລູກ.

## 30

1ເມື່ອນາງຣາເຊັນໄດ້ເຫັນວ່ານາງບໍ່ມີລູກແກ່ຢາໂຄບ, ຣາເຊັນກໍໄດ້ອິດສາເອື້ອຍຂອງນາງ. ນາງໄດ້ເວົ້າກັບຢາໂຄບວ່າ,"ຈົ່ງໃຫ້ລູກແກ່ຂ້ອຍ,
ຫລືບໍ່ດັ່ງນັ້ນກໍໃຫ້ຂ້ອຍຕາຍເສຍ."2ຢາໂຄບໄດ້ຮ້າຍນາງຣາເຊັນຫລາຍ. ເຂົາໄດ້ເວົ້າວ່າ,"ເຮົາເປັນເຫມືອນພຣະເຈົ້າຜູ້ຊຶ່ງ, ເຮັດໃຫ້ເຈົ້າບໍ່ມີ
ລູກບໍ?"

3ນາງໄດ້ເວົ້າວ່າ, "ເບິ່ງດູ, ນີ້ຄືບິນຮາ ຄົນຮັບໃຊ້ຂອງຂ້ອຍ. ຈົ່ງຫລັບນອນກັບນາງ, ເພື່ອທີ່ນາງຈະໄດ້ເກີດລູກເທິງຕັກຂອງຂ້ອຍ, ແລະ ຂ້ອ
ຍຈະມີລູກໂດຍນາງ."4ດັ່ງນັ້ນນາງຈຶ່ງໃຫ້ນາງບິນຮາ ຄົນຮັບໃຊ້ຂອງນາງເປັນເມຍອີກຄົນຫນຶ່ງຂອງຢາໂຄບ, ແລະ ເຂົາໄດ້ຫລັບນອນກັບນາງ.
5ນາງບິນຮາໄດ້ຕັ້ງທ້ອງ ແລະເກີດລູກຊາຍຄົນຫນຶ່ງໃຫ້ຢາໂຄບ.6ຣາເຊັນຈຶ່ງໄດ້ເວົ້າວ່າ, "ພຣະເຈົ້າໄດ້ຊົງຕັດສິນດ້ວຍຄວາມເມດຕາຂ້ອຍ.
ພຣະອົງໄດ້ຍິນຄຳອະທິຖານຂອງຂ້ອຍ ແລະປຣະທານລູກຊາຍຄົນຫນຶ່ງແກ່ຂ້ອຍ." ດ້ວຍເຫດນີ້ນາງຈຶ່ງໄດ້ເອີ້ນຊື່ເຂົາວ່າ ດານ.
7ນາງບິນຮາ, ຄົນຮັບໃຊ້ຂອງຣາເຊັນ, ໄດ້ຕັ້ງທ້ອງອີກຄັ້ງ ແລະ ເກີດລູກຊາຍຜູ້ທີສອງໃຫ້ແກ່ຢາໂຄບ.8ນາງຣາເຊັນໄດ້ເວົ້າວ່າ, "ດ້ວຍການຕໍ່ສູ້
ຢ່າງແຂ່ງຂັນ ຂ້ອຍໄດ້ຕໍ່ສູ້ກັບເອື້ອຍຂອງຂ້ອຍແລະຊະນະແລ້ວ." ນາງໄດ້ເອີ້ນຊື່ເຂົາວ່າເນັບທາລີ.
9ເມື່ອນາງເລອາ ໄດ້ເຫັນວ່ານາງໄດ້ຢຸດການມີລູກແລ້ວ, ນາງໄດ້ນຳເອົາຊິລະປາ, ຄົນຮັບໃຊ້ຂອງນາງມາ, ແລະ ໃຫ້ນາງເປັນເມຍອີກຄົນຫນຶ່ງ
ຂອງຢາໂຄບ.10ນາງຊິລະປາ, ຄົນຮັບໃຊ້ຂອງນາງເລອາ, ກໍເກີດລູກຊາຍຄົນຫນຶ່ງໃຫ້ຢາໂຄບ.11ເລອາໄດ້ເວົ້າວ່າ, "ນີ້ຄືໂຊກດີ!" ດັ່ງນັ້ນ ນາງຈຶ່ງ
ໄດ້ເອີ້ນຊື່ເຂົາວ່າ ກາດ.
12ຈາກນັ້ນນາງຊິລະປາ, ຄົນຮັບໃຊ້ຂອງເລອາ, ກໍໄດ້ລູກຊາຍຄົນທີສອງແກ່ຢາໂຄບ.13ນາງເອລາໄດ້ເວົ້າວ່າ, "ຂ້ອຍມີຄວາມສຸກ!
ເພາະລູກຍິງທັງຫລາຍຈະເອີ້ນຂ້ອຍວ່າ, ຜູ້ມີຄວາມຍິນດີ." ດັ່ງນັ້ນນາງຈຶ່ງໄດ້ເອີ້ນຊື່ຂອງເຂົາວ່າອາເຊ.
14ໃນລະດູເກັບກ່ຽວເຂົ້າສາລີ ຣູເບັນໄດ້ເຂົ້າໄປໃນທ້ອງທົ່ງນາ. ແລະພົບຕົ້ນຫມາກເຂືອຊະນິດຫນຶ່ງ. ເຂົາໄດ້ເອົາຫມາກມາໃຫ້ເລອາແມ່
ຂອງເຂົາ. ນາງຣາເຊັນເວົ້າກັບເລອາວ່າ, "ຂ້ອຍຂໍຫມາກເຂືອຂອງລູກຊາຍເຈົ້າຈັກຫນ່ວຍແດ່."15ນາງເລອາໄດ້ເວົ້າວ່າ,
"ມັນເປັນເລື່ອງເລັກນ້ອຍສຳລັບເຈົ້າບໍ, ທີ່ເຈົ້າໄດ້ຍາດເອົາຜົວຂອງຂ້ອຍໄປ? ແລະ ດຽວນີ້ເຈົ້າຍັງ
ຈະມາຍາດເອົາຫມາກເຂືອຂອງລູກຊາຍເຮົາໄປອີກດ້ວຍບໍ?" ຣາເຊັນໄດ້ເວົ້າວ່າ, "ເພື່ອແລກປ່ຽນກັບຫມາກເຂືອຂອງລູກຊາຍເຈົ້າຄືນນີ້, ເຂົາ
ຈະຫລັບນອນກັບເຈົ້າ."
16ໃນຕອນແລງຢາໂຄບໄດມາຈາກທົ່ງນາ. ເລອາໄດ້ອອກໄປພົບເພິ່ນ ແລະເວົ້າວ່າ,"ທ່ານຕ້ອງຫລັບນອນກັບຂ້ອຍຄືນນີ້, ເພາະ
ຂ້ອຍໄດ້ວ່າຈ້າງທ່ານດ້ວຍຫມາກເຂືອລູກຊາຍຂອງຂ້ອຍ." ດັ່ງນັ້ນ ຢາໂຄບຈຶ່ງໄດ້ຫລັບນອນກັບເລອາຄືນນັ້ນ.17ພຣະເຈົ້າໄດ້ຊົງຟັງເລອາ,
ແລະນາງໄດ້ຕັ້ງທ້ອງ, ແລະໄດ້ເກີດລູກຊາຍຄົນທີຫ້າແກ່ຢາໂຄບ.18ເລອາໄດ້ເວົ້າວ່າ, "ພຣະເຈົ້າໄດ້ປຣະທານຄ່າຈ້າງແກ່ຂ້ອຍ, ເພາະຂ້ອຍໄດ້
ໃຫ້ຍິງຮັບໃຊ້ຂອງຂ້ອຍແກ່ຜົວຂ້ອຍ." ນາງໄດ້ເອີ້ນຊື່ເຂົາວ່າ ອິດຊາຄາ.
19ນາງເລອາໄດ້ຕັ້ງທ້ອງອີກຄັ້ງ ແລະເກີດລູກຊາຍຄົນທີຫົກແກ່ຢາໂຄບ.20ນາງເລອາໄດ້ເວົ້າວ່າ, "ພຣະເຈົ້າໄດ້ປຣະທານຂອງຂວັນຢ່າງດີແກ່ຂ້ອຍ.
ບັດນີ້ຜົວຂອງຂ້ອຍຈະໃຫ້ກຽຕແກ່ຂ້ອຍ ເພາະວ່າຂ້ອຍໄດ້ໃຫ້ລູກຊາຍຫົກຄົນແກ່ລາວ." ນາງໄດ້ເອີ້ນຊື່ເຂົາວ່າ ເຊບູໂລນ.21ຫລັງຈາກນັ້ນນາງ
ໄດ້ເກີດລູກສາວຄົນຫນຶ່ງ ແລະໄດ້ເອີ້ນຊື່ນາງວ່າ ດີນາ.
22ພຣະເຈົ້າຄິດເຖິງນາງຣາເຊັນ ແລະຟັງນາງ. ພຣະອົງຊົງເຮັດໃຫ້ນາງຖືພາ.23ນາງໄດ້ຖືພາ ແລະ ເກີດລູກຊາຍຜູ້ຫນຶ່ງ. ນາງໄດ້ເວົ້າວ່າ,
"ພຣະເຈົ້າໄດ້ຊົງນຳເອົາຄວາມອັບອາຍຂອງຂ້ອຍອອກໄປ."24ນາງໄດ້ເອີ້ນຊື່ເຂົາວ່າໂຢເຊບ, ແລະ ກ່າວວ່າ, "ພຣະຢາເວໄດ້ຊົງເພີ່ມລູກ ຊາຍ
ອີກຄົນຫນຶ່ງໃຫ້ແກ່ຂ້ອຍ."
25ຫລັງຈາກຣາເຊັນໄດ້ເກີດໂຢເຊັບ, ຢາໂຄບໄດ້ເວົ້າກັບລາບານວ່າ, "ຂໍສົ່ງຂ້ອຍໄປ, ເພື່ອທີ່ຂ້ອຍຈະໄປຍັງທີ່ບ້ານຂອງຂ້ອຍ ແລະ
ດິນແດນຂອງຂ້ອຍ.26ຂໍມອບເມຍທັງຫລາຍຂອງຂ້ອຍ ແລະ ລູກທັງຫລາຍຂອງຂ້ອຍຜູ້ທີ່ຂ້ອຍໄດ້ມາ ເພາະຂ້ອຍໄດ້ຮັບໃຊ້ທ່ານ, ແລະ
ອະນຸຍາດໃຫ້ຂ້ອຍໄປ, ເພາະທ່ານຮູ້ເຖິງການຮັບໃຊ້ທີ່ຂ້ອຍໄດ້ຮັບໃຊ້ທ່ານ."
27ແຕ່ລາບານຕອບວ່າ,"ດຽວນີ້ຖ້າເຮົາເປັນທີ່ຊື່ນຊອບໃນສາຍຕາເຈົ້າ, ຂໍລໍໄວ້ກ່ອນເພາະວ່າເຮົາໄດ້ຮຽນຮູ້ໂດຍການໃຊ້ການທຳນວາຍວ່າ
ພຣະຢາເວໄດ້ອວຍພອນເຮົາເພາະເຈົ້າ."28ແລະເຂົາໄດ້ເວົ້າອີກວ່າ,"ຈົ່ງບອກຄ່າຈ້າງຂອງເຈົ້າມາ, ເຮົາເຕັມໃຈທີ່ຈະຈ່າຍຄ່າຈ້າງນັ້ນ."
29ຢາໂຄບຕອບລາບານວ່າ, "ທ່ານຮູ້ຢູ່ແລ້ວວ່າຂ້ອຍໄດ້ຮັບໃຊ້ທ່ານຢ່າງໃດ, ແລະຝູງສັດລ້ຽງຂອງທ່ານຄືຢ່າງໃດເມື່ອຢູ່ກັບຂ້ອຍ.30ກ່ອນ
ທີ່ຂ້ອຍຈະມາ ທ່ານມີຝູງສັດພຽງແຕ່ຫນ້ອຍດຽວ. ຂະນະນີ້ມັນໄດ້ເພີ່ມຂຶ້ນຫລວງຫລາຍ. ພຣະຢາເວໄດ້ອວຍພອນທ່ານ
ໃນທຸກຢ່າງທີ່ຂ້ອຍໄດ້ເຮັດ. ແລ້ວເມື່ອໃດຂ້ອຍຈຶ່ງຈະໄດ້ຈັດຕຽມສຳລັບຄອບຄົວຂອງຕົນເອງ."
31ດັ່ງນັ້ນລາບານເວົ້າວ່າ, "ຈະໃຫ້ເຮົາຈ່າຍອັນໃດແກ່ເຈົ້າ?" ຢາໂຄບໄດ້ເວົ້າວ່າ, "ທ່ານບໍ່ຕ້ອງໃຫ້ອັນໃດແກ່ຂ້ອຍ. ຖ້າ
ທ່ານຈະເຮັດສິ່ງນີ້ເພື່ອຂ້ອຍ, ຂ້ອຍຈະລ້ຽງ ແລະ ດູແລຮັກສາຝູງສັດຂອງທ່ານອີກຄັ້ງ.32ໃນມື້ນີ້ໃຫ້ຂ້ອຍຍ່າງຜ່ານຝູງສັດທັງຫມົດ,
ຂອງທ່ານຂໍແຍກແກະທຸກຕົວທີ່ມີຈຸດ, ແລະດ່າງ ແລະ ສີດຳທຸກໆໂຕອອກຈາກຝູງ, ແລະ ແບ້ທຸກຕົວທີ່ມີຈຸດ ແລະດ່າງທຸກຕົວອອກຈາກຝູງ.
ເຫລົ່ານີ້ຈະເປັນຄ່າຈ້າງຂອງຂ້ອຍ.
33ຄວາມສັດຊື່ຂອງຂ້ອຍຈະຢືນຢັນຂ້ອຍ, ໃນພາຍຫລັງເມື່ອທ່ານຈະມາກວດສອບຄ່າຈ້າງຂອງຂ້ອຍ. ທຸກຕົວທີ່ບໍ່ດ່າງ ແລະບໍ່ມີ
ຈຸດທ່າມກາງແບ້ທັງຫລາຍ, ແລະສີດຳ ທ່າມກາງແກະທັງຫລາຍຖ້າເຫັນຈັກຕົວໃນຝູງສັດຂອງຂ້ອຍ, ຈະຖືວ່ານັ້ນເປັນການລັກມາ."34ລາບານໄດ້
ເວົ້າວ່າ, "ຕົກລົງ. ໃຫ້ເປັນໄປຕາມທີ່ເຈົ້າເວົ້ານັ້ນ."
35ມື້ນັ້ນ ລາບານໄດ້ແຍກແບ້ໂຕຜູ້ທັງຫລາຍຊຶ່ງມີລາຍຍາວແລະຈຸດ, ແລະແບ້ໂຕແມ່ທັງຫມົດທີ່ດ່າງແລະມີຈຸດ, ທຸກໂຕທີ່ມີສີຂາວ, ແລະແກະທຸກ
ໂຕທີ່ມີສີດຳ, ແລະໃຫ້ພວກມັນຢູ່ໃນມືຂອງພວກລູກຊາຍທັງຫລາຍຂອງເຂົາ.36ລາບານໄດ້ແຍກຝູງສັດຂອງເຂົາ ກັບຂອງຢາໂຄບ. ໃຫ້ຢູ່ຫ່າງກັນ
ໄລຍະທາງເດີນເຖິງສາມວັນ. ດັ່ງນັ້ນຢາໂຄບຍັງຄົງໄດ້ລ້ຽງສັດທີ່ເຫລືອຂອງລາບານ.
37ຢາໂຄບໄດ້ເອົາງ່າໄມ້ຈາກຕົ້ນຈັນປ່າ ຕົ້ນຫມາກບົກ, ແລະຕົ້ນຫູກວາງ ແລະປອກເປືອກໃຫ້ເປັນລາຍເຮັດໃຫ້ເຫັນເນື້ອໄມ້ສີຂາວດ້ານໃນ.
38ຈາກນັ້ນເຂົາໄດ້ວາງງ່າໄມ້ທີ່ເຂົາໄດ້ປອກເປືອກຕໍ່ຝູງສັດຂ້າງຫນ້າອ່າງນ້ຳທີ່ສັດໄດ້ເຂົ້າກິນ. ພວກມັນໄດ້ຕັ້ງທ້ອງເມື່ອພວກມັນເຂົ້າມາກິນນ້ຳ.
39ຝູງສັດໄດ້ແຜ່ພັນຂ້າງຫນ້າກິ່ງໄມ້ເຫລົ່ານັ້ນ; ແລະຝູງສັດເກີດລູກອ່ອນມີລາຍເປັນ, ດ່າງ ແລະມີຈຸດ.40ຢາໂຄບໄດ້ແຍກລູກແກະເຫລົ່ານີ້ອອກ,
ແຕ່ເຮັດໃຫ້ສ່ວນທີ່ເຫລືອຫັນຫນ້າໄປທາງຝູງສັດທີ່ມີສີລາຍ ແລະແກະດຳທັງຫມົດໃນຝູງຂອງລາບານ. ຈາກນັ້ນເຂົາໄດ້ແຍກຝູງສັດຂອງເຂົາ
ສຳລັບເຂົາເອງຕ່າງຫາກ ແລະບໍ່ໄດ້ນຳໄປລວມກັບຝູງສັດຂອງລາບານ.


generated on Tue Jun 17 19:01:42 2025

41 ເມື່ອແກະທີ່ແຂງແຮງໃນຝູງກຳລັງປະສົມພັນ, ຢາໂຄບກໍຈະວາງງ່າໄມ້ເຫລົ່ານັ້ນ ໃນຮາງນ້ຳຕໍ່ຫນ້າຝູງແກະ,
ດັ່ງນັ້ນພວກມັນຈະຕັ້ງທ້ອງທ່າມກາງງ່າໄມ້ເຫລົ່ານັ້ນ. 42 ແຕ່ຫາກສັດທີ່ອ່ອນແອໃນຝູງເຂົ້າມາເຂົາຈະບໍ່ວາງງ່າໄມ້ເຫລົ່ານັ້ນຕໍ່ຫນ້າພວກມັນ.
ດັ່ງນັ້ນສັດໂຕທີ່ອ່ອນແອຂອງລາບານ, ແລະໂຕທີ່ແຂງແຮງກໍຕົກເປັນຂອງຢາໂຄບ.
43 ຜູ້ຊາຍຄົນນັ້ນກາຍເປັນຄົນຮັ່ງມີເຂົາໄດ້ສັດຝູງໃຫຍ່, ຍິງຮັບໃຊ້ທັງຫລາຍ, ແລະຊາຍຮັບໃຊ້ທັງຫລາຍ ແລະ, ອູດທັງຫລາຍ,
ແລະລໍທັງຫລາຍ.

 generated on Tue Jun 17 19:01:42 2025

# 31

1ຂະນະນັ້ນຢາໂຄບໄດ້ຍິນຖ້ອຍຄຳຂອງພວກລູກຊາຍຂອງລາບານ, ພວກເຂົາເວົ້າກັນວ່າ, "ຢາໂຄບໄດ້ເອົາທຸກສິ່ງທີ່ເປັນຂອງພໍ່ພວກເຮົາ
ໄປ, ແລະຈາກຊັບສິນຂອງພໍ່ເຮົານັ້ນເອງ ເຂົາຈຶ່ງໄດ້ມີຄວາມຮັ່ງມີທັງຫມົດນີ້."2ຢາໂຄບໄດ້ເຫັນທ່າທີຂອງລາບານ.
ເຂົາໄດ້ເຫັນວ່າຄວາມຄິດຂອງລາບານທີ່ມີຕໍ່ຕົນນັ້ນໄດ້ປ່ຽນແປງໄປ.3ແລ້ວພຣະຢາເວກໍໄດ້ບອກລາວວ່າ, "ຈົ່ງກັບຄືນໄປຍັງແຜ່ນດິນຂອງ
ບັນພະບຸຣຸດຂອງເຈົ້າ ແລະຍາດພີ່ນ້ອງຂອງເຈົ້າ, ແລະເຮົາຈະຢູ່ກັບເຈົ້າ."

4ຢາໂຄບໄດ້ໃຊ້ຄົນໄປ ແລະ ເອີ້ນຫານາງຣາເຊັນ ແລະ ນາງເລອາໃຫ້ໄປຍັງທົ່ງທີ່ງໄປທີ່ຝູງສັດ.5ແລະ ເວົ້າກັບພວກເຂົາວ່າ, "ຂ້ອຍໄດ້ເຫັນວ່າ
ພໍ່ຂອງພວກເຈົ້າທີ່ມີຕໍ່ຂ້ອຍໄດ້ປ່ຽນແປງໄປ, ແຕ່ພຣະເຈົ້າຂອງພໍ່ຂ້ອຍສະຖິດຢູ່ນຳຂ້ອຍ.6ພວກເຈົ້າກໍຮູ້ແລ້ວວ່າ
ມັນເປັນພອນກຳລັງທັງຫມົດຂອງຂ້ອຍທີ່ຂ້ອຍໄດ້ຮັບໃຊ້ພໍ່ຂອງພວກເຈົ້າ.
7ພໍ່ຂອງພວກເຈົ້າໄດ້ຫລອກລວງຂ້ອຍ ແລະປັບປ່ຽນຄ່າຈ້າງຂອງຂ້ອຍເຖິງສິບເທື່ອ, ແຕ່ພຣະເຈົ້າບໍ່ໄດ້ຊົງອະນຸຍາດໃຫ້ເພິ່ນທຳຮ້າຍຂ້ອຍ.
8ຖ້າເຂົາໄດ້ເວົ້າວ່າ, "ສັດໂຕທີ່ດ່າງຈະເປັນຄ່າຈ້າງຂອງເຈົ້າ, ຈາກນັ້ນຝູງສັດທັງຫມົດກໍຈະໃຫ້ລູກເປັນດ່າງ.
ຖ້າເຂົາໄດ້ເວົ້າວ່າໃຫ້ໂຕທີ່ລາຍເປັນຄ່າຈ້າງຂອງເຈົ້າ, ຈາກນັ້ນຝູງສັດທັງຫມົດກໍຈະໃຫ້ລູກເປັນລາຍ.9ດ້ວຍວິທີການນີ້ພຣະເຈົ້າໄດ້ນຳເອົາ
ຝູງສັດລ້ຽງຂອງພໍ່ພວກເຈົ້າ ແລະ ໄດ້ມອບພວກມັນໃຫ້ແກ່ຂ້ອຍ.
10ໃນລະດູປະສົມພັນສັດ, ໃນຄວາມຝັນນັ້ນ ຂ້ອຍໄດ້ເຫັນພວກແບ້ໂຕຜູ້ກຳລັງປະສົມພັນກັບຝູງສັດນັ້ນ. ພວກແບ້ໂຕຜູ້ເປັນແບ້ລາຍ, ແບ້ດ່າງ,
ແລະແບ້ມີຈຸດ.11ທູດສະຫວັນຂອງພຣະເຈົ້າໄດ້ເວົ້າກັບຂ້ອຍທາງຄວາມຝັນວ່າ,"ຢາໂຄບເອີຍ" ຂ້ອຍຕອບວ່າ,"ຂ້ານ້ອຍຢູ່ທີ່ນີ້."
12ເພິ່ນໄດ້ເວົ້າວ່າ, "ຈົ່ງເງີຍຫນ້າ ແລະ ເບິ່ງພວກແບ້ໂຕຜູ້ທີ່ກຳລັງປະສົມພັນໃນຝູງສັດນັ້ນ. ພວກມັນເປັນແບ້ລາຍ, ແບ້ດ່າງ, ແລະ ແບ້ມີຈຸດ.
ເພາະວ່າເຮົາໄດ້ເຫັນທຸກໆສິ່ງທີ່ລາບານກຳລັງເຮັດກັບເຈົ້າ.13ເຮົາແມ່ນພຣະເຈົ້າແຫ່ງເບັດເອນ, ທີ່ຊຶ່ງເຈົ້າໄດ້ເຈີມເສົາຫີນຕົ້ນຫນຶ່ງ,
ທີ່ເຈົ້າໄດ້ໃຫ້ຄຳສາບານແກ່ເຮົາ. ບັດນີ້ຈົ່ງລຸກຂຶ້ນ ແລະໄປຈາກແຜ່ນດິນນີ້ ແລະ ກັບໄປຍັງແຜ່ນດິນເກີດຂອງເຈົ້າ.""
14ຣາເຊັນ ແລະເລອາໄດ້ຕອບ ແລະເວົ້າກັບເພິ່ນວ່າ, "ຍັງຈະມີສ່ວນໃດ ຫລືມໍຣະດົກເຫລືອສຳລັບພວກເຮົາໃນບ້ານຂອງພໍ່ອີກບໍ?15ເພິ່ນ
ບໍ່ໄດ້ເຮັດກັບເຮົາຄືຄົນຕ່າງຊາດບໍ? ເພາະເພິ່ນໄດ້ຂາຍເຮົາ ແລະໄດ້ໃຊ້ເງິນຂອງເຮົາໄປຫມົດແລ້ວດ້ວຍ.16ເພາະຄວາມຮັ່ງມີທັງຫມົດພຣະເຈົ້າ
ໄດ້ເອົາໄປຈາກພໍ່ຂອງພວກເຮົາ ແລະດຽວນີ້ມັນເປັນຂອງພວກເຮົາ ແລະລູກໆ ທັງຫລາຍຂອງພວກເຮົາ. ບັດນີ້, ທ່ານຈົ່ງເຮັດໃນສິ່ງທີ່ພຣະເຈົ້າ
ໄດ້ບອກທ່ານເຖີດ."
17ຢາໂຄບຈຶ່ງໄດ້ລຸກຂຶ້ນ ແລະເອົາລູກຊາຍທັງຫລາຍຂອງເຂົາ ແລະເມຍທັງຫລາຍຂອງເຂົາຂຶ້ນຂີ່ຫລັງອູດ.
18ເຂົາໄດ້ໄລ່ຕ້ອນຝູງສັດທັງຫມົດຂອງເຂົາໄປຂ້າງຫນ້າເຂົາ, ພ້ອມກັບຊັບສິນທັງຫມົດຂອງເຂົາ,
ລວມທັງຝູງສັດທີ່ເຂົາຫາມາໄດ້ໃນປັດດານອາຣຳ. ຈາກນັ້ນເຂົາໄດ້ອອກເດີນທາງເພື່ອໄປຫາອີຊາກພໍ່ຂອງເຂົາໃນແຜ່ນການາອານ.
19ເມື່ອລາບານອອກໄປຕັດຂົນແກະຂອງເຂົາ, ນາງຣາເຊັນໄດ້ລັກເອົາພວກພະຄົວເຮືອນຂອງພໍ່ນາງໄປດ້ວຍ.20ຢາໂຄບໄດ້ຫລອກລາບານຊາວ
ອາຣຳ, ໂດຍບໍ່ໄດ້ບອກເພິ່ນວ່າເຂົາກຳລັງຈະຈາກໄປ.21ດັ່ງນັ້ນເຂົາຈຶ່ງໄດ້ຫນີໄປພ້ອມກັບສິ່ງທັງຫມົດທີ່ເຂົາມີ, ແລະຂ້າມແມ່ນ້ຳໄປຢ່າງຮີບດ່ວນ
ແລະມຸ່ງຫນ້າໄປຍັງດິນແດນເນີນພູກີເລອາດ.
22ໃນວັນທີສາມ ລາບານໄດ້ຮັບການບອກເລົ່າວ່າຢາໂຄບໄດ້ຫນີໄປແລ້ວ.23ດັ່ງນັ້ນ ເພິ່ນໄດ້ນຳເອົາຍາຕທັງຫລາຍຂອງເພິ່ນແລະເດີນທາງໄລ່ຕາມ
ເຂົາເປັນເວລາເຈັດວັນ. ເພິ່ນໄດ້ຕາມມາທັນຢາໂຄບໃນດິນແດນເນີນພູກີເລອາດ.
24ຂະນະນັ້ນ ພຣະເຈົ້າໄດ້ສະເດັດມາຫາລາບານຊາວອາຣຳໃນຄວາມຝັນໃນຕອນກາງຄືນ ແລະກ່າວແກ່ເພິ່ນວ່າ, "ຈົ່ງລະວັງ ທີ່ເຈົ້າຈະເວົ້າກັບ
ຢາໂຄບບໍ່ວ່າດີຫລືຮ້າຍ."25ລາບານໄດ້ໄລ່ມາທັນຢາໂຄບ. ຂະນະທີ່ຢາໂຄບຕັ້ງເຕັນຂອງເຂົາໃນດິນແດນເທິງເນີນພູເຊັ່ນກັນ. ລາບານກໍໄດ້ຕັ້ງ
ເຕັນກັບພວກຍາຕຂອງເພິ່ນໃນດິນແດນເນີນພູກີເລອາດ.
26ລາບານໄດເວົ້າກັບຢາໂຄບວ່າ, "ເປັນຫຍັງເຈົ້າຈຶ່ງຫລອກລວງເຮົາ, ແລະພາພວກລູກສາວຂອງເຮົາຫນີມາເຫມືອນດັ່ງຍິງຊະເລີຍເສິກ?
27ເປັນຫຍັງເຈົ້າຈຶ່ງຫນີມາແບບລັບໆ ແລະຫລອກລວງເຮົາ ແລະບໍ່ບອກເຮົາ? ເຮົາຢາກຈະສົ່ງເຈົ້າ ດ້ວຍການລ້ຽງສະຫລອງ ແລະຮ້ອງເພງ,
ດ້ວຍລຳມະນາດ ແລະພິນເຂົາຄູ່.28ເຈົ້າບໍ່ໄດ້ໃຫ້ເຮົາຈູບລາຫລານທັງຫລາຍຂອງເຮົາ ແລະລູກສາວທັງຫລາຍຂອງເຮົາ. ບັດນີ້ເຈົ້າໄດ້ເຮັດ
ໃນສິ່ງທີ່ໂງ່ໆເຊັ່ນນີ້.
29ມັນເປັນອຳນາດຂອງເຮົາທີ່ຈະທຳຮ້າຍເຈົ້າ, ແຕ່ພຣະເຈົ້າຂອງພໍ່ເຈົ້າໄດ້ກ່າວກັບເຮົາເມື່ອຄືນນີ້ ແລະກ່າວວ່າ,
"ຈົ່ງລະວັງທີ່ເຈົ້າຈະເວົ້າກັບຢາໂຄບບໍ່ວ່າຈະດີຫລືຮ້າຍ.30ດຽວນີ້ເຈົ້າໄດ້ຫນີອອກມາ ເພາະວ່າເຈົ້າປາຖະຫນາທີ່ຈະກັບໄປຍັງບ້ານ
ຂອງພໍ່ເຈົ້ານານແລ້ວ. ແຕ່ເປັນຫຍັງ ເຈົ້າຈຶ່ງລັກເອົາພວກພະຂອງເຮົາມາດ້ວຍ."
31ຢາໂຄບຕອບວ່າ, "ເພາະວ່າຂ້ອຍຢ້ານ ແລະຄິດວ່າທ່ານຈະໃຊ້ກຳລັງບີບບັງຄັບເອົາລູກສາວທັງຫລາຍຂອງທ່ານ
ໄປຈາກຂ້ອຍດັ່ງນັ້ນຂ້ອຍຈຶ່ງອອກມາຢ່າງລັບໆ.32ໃຜກໍຕາມທີ່ລັກພວກພະຂອງທ່ານມາ. ຈະບໍ່ມີຊີວິດຢູ່ອີກຕໍ່ໄປ
ຕໍ່ຫນ້າຍາດພີ່ນ້ອງທັງຫລາຍຂອງເຮົາຈົ່ງພິຈາລະນາວ່າອັນໃດທີ່ຢູ່ກັບຂ້ອຍ, ແລະເປັນຂອງທ່ານ ແລະນຳໄປເຖີດ." ເພາະວ່າ ຢາໂຄບບໍ່ຮູ້ວ່າ
ຣາເຊັນໄດ້ລັກພວກມັນມານຳ.
33ລາບານໄດ້ເຂົ້າໄປໃນເຕັນຂອງຢາໂຄບ. ເຂົາໄປໃນເຕັນຂອງເລອາ, ແລະເຂົ້າໄປໃນເຕັນຂອງຍິງຮັບໃຊ້ທັງສອງ, ແຕ່ເພິ່ນບໍ່ໄດ້ພົບພວກມັນ.
ເພິ່ນໄດ້ອອກມາຈາກເຕັນຂອງເລອາ ແລະເຂົ້າໄປໃນເຕັນຂອງຣາເຊັນ.
34ຂະນະນັ້ນຣາເຊັນໄດ້ນຳພວກພະຂອງຄົວເຮືອນມາ, ເກັບໄວ້ໃນຖົງອານໃສ່ຫລັງອູດ, ແລະນັ່ງທັບພວກມັນໄວ້. ລາບານໄດ້ຫາທົ່ວເຕັນທັງຫມົດ
ແຕ່ບໍ່ໄດ້ພົບພວກມັນ.35ນາງໄດ້ເວົ້າກັບພໍ່ຂອງນາງວ່າ,"ຢ່າຮ້າຍລູກເລີຍ, ເຈົ້ານາຍຂອງຂ້ອຍ, ທີ່ຂ້ອຍບໍ່ສາມາດລຸກຢືນຕໍ່ຫນ້າທ່ານໄດ້,
ເພາະຂ້ອຍກຳລັງຢູ່ໃນຊ່ວງເວລາຂອງຂ້ອຍ." ດັ່ງນັ້ນເພິ່ນຈຶ່ງໄດ້ຫາແຕ່ບໍ່ໄດ້ພົບພວກພະຄົວເຮືອນຂອງເຂົາ.
36ຢາໂຄບໄດ້ຮ້າຍ ແລະໂຕ້ຖຽງກັບລາບານ. ເຂົາໄດ້ເວົ້າກັບເພິ່ນວ່າ,"ຂ້ອຍໄດ້ເຮັດຫຍັງຜິດ? ຄວາມບາບຂອງຂ້ອຍຄືຫຍັງ,
ທີ່ທ່ານຕ້ອງຮີບດ່ວນຕິດຕາມຂ້ອຍມາ?37ເພາະວ່າທ່ານໄດ້ຄົ້ນຫາສິ່ງຂອງທັງຫມົດຂອງຂ້ອຍແລ້ວ. ທ່ານພົບອັນໃດ
ຂອງພວກເຄື່ອງໃຊ້ໃນຄົວເຮືອນທັງຫມົດ? ນຳພວກມັນມາຕັ້ງໄວ້ທີ່ນີ້ ຕໍ່ຫນ້າຍາຕຂອງຂ້ອຍ,
ເພື່ອທີ່ພວກເຂົາຈະໄດ້ຕັດສິນຄວາມລະຫວ່າງເຮົາທັງສອງຝ່າຍ.


generated on Tue Jun 17 19:01:42 2025

38ຂ້ອຍໄດ້ຢູ່ກັບທ່ານ. ແກະໂຕແມ່ທັງຫລາຍຂອງທ່ານ ແລະ ແບ້ໂຕແມ່ທັງຫລາຍບໍ່ເຄີຍເສຍ, ຫລືຂ້ອຍບໍ່ເຄີຍກິນລູກແກະເຖິກໃດໆຈາກ
ຝູງສັດທັງຫລາຍຂອງທ່ານ. 39ໂຕທີ່ຖືກສັດປ່າກັດຕາຍ ຂ້ອຍບໍ່ໄດ້ນຳກັບມາໃຫ້ທ່ານ. ແຕ່ຂ້ອຍໄດ້ໃຊ້ແທນໃຫ້,
ທ່ານໄດ້ໃຫ້ຂ້ອຍຊົດໃຊ້ແທນສັດທຸກຕົວທີ່ເສຍຫາຍ. ບໍ່ວ່າຈະຖືກລັກໃນຕອນກາງເວັນ, ແລະ ຕອນກາງຄືນ. 40ຂ້ອຍໄດ້ຢູ່ທີ່ນັ້ນ;
ໃນເວລາກາງເວັນທີ່ຮ້ອນແຜດເຜົາຂ້ອຍ, ແລະຫິມະໃນຕອນກາງຄືນ; ແລະ ຂ້ອຍໄດ້ອອກໄປໂດຍບໍ່ໄດ້ນອນຕາຫລັບ.
41ຊາວປີມານີ້ທີ່ຂ້ອຍໄດ້ອາໄສຢູ່ໃນຄົວເຮືອນຂອງທ່ານ. ຂ້ອຍໄດ້ທຳງານໃຫ້ທ່ານສິບສີ່ປີເພື່ອລູກສາວທັງສອງຄົນຂອງທ່ານ, ແລະອີກຫົກປີເພື່ອ
ຝູງສັດລ້ຽງຂອງທ່ານ. ທ່ານໄດ້ປັບປ່ຽນຄ່າຈ້າງຂອງຂ້ອຍເຖິງສິບເທື່ອ. 42ຖ້າພຣະເຈົ້າຂອງພໍ່ຂ້ອຍ, ພຣະເຈົ້າຂອງອັບຣາຮາມ, ແລະ
ພຣະອົງດຽວທີ່ອີຊາກເກງກົວ, ບໍ່ໄດ້ສະຖິດຢູ່ນຳຂ້ອຍ, ແນ່ນອນປານນີ້ທ່ານຄົງຈະສົ່ງຂ້ອຍໄປມືເປົ່າ. ພຣະເຈົ້າໄດ້ຊົງເຫັນການກ
ົດຂີ່ຂົ່ມເຫັງຂອງຂ້ອຍ ແລະຂ້ອຍເຮັດວຽກງານຫນັກຢ່າງໃດ, ແລະພຣະອົງໄດ້ຊົງວ່າກ່າວທ່ານເມື່ອຄືນນີ້."
43ລາບານໄດ້ຕອບ ແລະເວົ້າກັບຢາໂຄບວ່າ, "ພວກລູກສາວກໍ່ເປັນລູກສາວທັງຫລາຍຂອງເຮົາ, ພວກຫລານໆກໍ່ເປັນຫລານທັງຫລາຍຂອງເຮົາ,
ແລະຝູງສັດທັງຫລາຍກໍ່ຄືຝູງສັດຂອງເຮົາ. ທັງຫມົດທີ່ເຈົ້າເຫັນລ້ວນເປັນຂອງເຮົາ, ແຕ່ເຮົາຈະເຮັດຢ່າງໃດໃນວັນນີ້ເພື່ອພວກລູກສາວຂອງເຮົາ,
ຫລືເພື່ອລູກທັງຫລາຍຂອງພວກເຂົາທີ່ພວກເຂົາໄດ້ໃຫ້ເກີດມາ? 44ດັ່ງນັ້ນ, ມາເຖີດໃຫ້ເຮົາມາເຮັດພັນທະສັນຍາກັນລະຫວ່າງ, ເຈົ້າກັບເຮົາ,
ແລະໃຫ້ພັນທະສັນຍານັ້ນເປັນພະຍານລະຫວ່າງເຈົ້າກັບເຮົາ."
45ດັ່ງນັ້ນຢາໂຄບໄດ້ນຳກ້ອນຫີນມາ ແລະຕັ້ງເປັນກອງ. 46ຢາໂຄບໄດ້ເວົ້າກັບພວກຍາດຂອງເຂົາວ່າ, "ຈົ່ງເກັບກ້ອນຫີນມາລວມກັນ."
ດັ່ງນັ້ນພວກເຂົາຈຶ່ງໄດ້ເກັບກ້ອນຫີນ. ມາເຮັດເປັນກອງຈາກນັ້ນພວກເຂົາໄດ້ກິນລ້ຽງໃກ້ກອງຫີນນັ້ນ. 47ລາບານໄດ້ເອີ້ນມັນວ່າ ເຢກາສາຮາດູທາ,
ແຕ່ຢາໂຄບເອີ້ນມັນວ່າ ຄາລີເອັດ.
48ລາບານໄດ້ເວົ້າວ່າ, "ວັນນີ້ກອງຫີນນີ້ຈະເປັນສິ່ງເຕືອນໃຈລະຫວ່າງເຮົາກັບເຈົ້າ." ດັ່ງນັ້ນມັນຈຶ່ງຖືກເອີ້ນຊື່ວ່າ ຄາລີເອັດ. 49ມັນຍັງຖືກເອີ້ນວ່າ
ມີຊະປາດ້ວຍ, ເພາະວ່າລາບານໄດ້ເວົ້າວ່າ, "ຂໍໃຫ້ພຣະຢາເວຊົງເຝົ້າຄອຍເບິ່ງລະຫວ່າງເຈົ້າກັບເຮົາ, ເມື່ອເຮົາພົ້ນຈາກສາຍຕາຊຶ່ງກັນ
ແລະກັນ". 50ຖ້າເຈົ້າປະຕິບັດບໍ່ດີຕໍ່ລູກສາວທັງຫລາຍຂອງເຮົາ, ຫລືຖ້າເຈົ້າໄປມີເມຍໃຫມ່ທີ່ນອກເຫນືອໄປຈາກລູກສາວທັງຫລາຍຂອງເຮົາ, ເຖິງ
ແມ່ນວ່າເຮົາຝ່າຍໃດຝ່າຍຫນຶ່ງ, ຈະບໍ່ເຫັນພຣະເຈົ້າຊົງເປັນພະຍານລະຫວ່າງເຈົ້າກັບເຮົາ."
51ລາບານໄດ້ເວົ້າກັບຢາໂຄບ, "ຈົ່ງເບິ່ງກອງຫີນນີ້, ແລະເບິ່ງໄປທີ່ເສົາຫີນຊຶ່ງເຮົາໄດ້ຕັ້ງໄວ້, ລະຫວ່າງເຈົ້າກັບເຮົາ. 52ກອງຫີນນີ້ເປັນພະຍານ,
ແລະເສົາຫີນນີ້ກໍ່ເປັນພະຍານ, ທີ່ເຮົາຈະ ບໍ່ຜ່ານເຂົ້າໄປເກີນກວ່າເສົານີ້ໄປຫາເຈົ້າ, ແລະທີ່ເຈົ້າກໍ່ຈະບໍ່ຜ່ານເຂົ້າໄປເກີນກວ່າກອງຫີນ
ນີ້ໄປຫາເຮົາເພື່ອທີ່ຈະທຳຮ້າຍກັນ. 53ຂໍໃຫ້ພຣະເຈົ້າຂອງອັບຣາຮາມ, ແລະພະຂອງນາໂຮ, ແລະພວກພະທັງຫລາຍຂອງພໍ່ພວກເຂົາ, ຈະເປັນ
ຜູ້ຕັດສິນຄວາມລະຫວ່າງເຮົາ." ຢາໂຄບໄດ້ສາບານໂດຍພຣະອົງຜູ້ທີ່ອີຊາກພໍ່ຂອງທ່ານຢຳເກງ.
54ຢາໂຄບໄດ້ຖວາຍເຄື່ອງບູຊາທີ່ເນີນພູ ແລະໄດ້ເຊີນພວກຍາດຂອງຕົນມາກິນອາຫານ. ພວກເຂົາທັງຫລາຍໄດ້ກິນ ແລະໃຊ້ເວລາທັງຄືນ
ເທິງພູເຂົານັ້ນ. 55ລາບານໄດ້ຕື່ນຂຶ້ນແຕ່ເຊົ້າໆ, ຈູບພວກຫລານຊາຍຂອງເພິ່ນ ແລະພວກລູກສາວຂອງເພິ່ນ ແລະອວຍພອນພວກເຂົາ ຈາກນັ້ນ
ລາບານກໍ່ໄດ້ຈາກໄປ ແລະກັບໄປຍັງບ້ານເມືອງຂອງຕົນ.


generated on Tue Jun 17 19:01:42 2025

32 1ທູດສະຫວັນຂອງພຣະເຈົ້າໄດ້ມາພົບເຂົາ.2ເມື່ອຢາໂຄບໄດ້ເຫັນພວກເພິ່ນ ເຂົາຈຶ່ງເວົ້າວ່າ, "ນີ້ຄືທີ່ພັກຂອງພຣະເຈົ້າ." ດັ່ງນັ້ນ ເຂົາໄດ້ເອີ້ນ
ຊື່ທີ່ນັ້ນວ່າ ມະຫານາອິມ.

3ຢາໂຄບໄດ້ສົ່ງພວກຄົນນຳຂ່າວໄປລ່ວງໜ້າເຂົາໄປຫາເອຊາວອ້າຍຂອງຕົນ ໃນແຜ່ນດິນເສອີ ໃນດິນແດນຂອງເອໂດມ.4ເຂົາໄດ້ສັ່ງຄົນນຳຂ່າວ,
ກ່າວວ່າ, "ນີ້ຄືສິ່ງທີ່ພວກເຈົ້າຈະເວົ້າກັບເອຊາວເຈົ້ານາຍຂອງເຮົານີ້ຄື: ສິ່ງທີ່ຢາໂຄບ ຄົນຮັບໃຊ້ຂອງທ່ານເວົ້າຄືຂ້ອຍໄດ້ຢູ່ກັບລາບານ,  ແລະ
ໄດ້ເລື່ອນເວລາກັບມາຂອງຂ້ອຍຈົນເຖິງເວລານີ້.5ຂ້ອຍມີຝູງງົວ, ຝູງລໍ, ແລະ ຝູງສັດລ້ຽງ, ພ້ອມຄົນຮັບໃຊ້ຜູ້ຊາຍ, ແລະ ຄົນຮັບໃຊ້ຜູ້ຍິງ.
ຂ້ອຍໄດ້ສົ່ງສານນີ້ມາເຖິງເຈົ້ານາຍຂອງຂ້ອຍ, ເພື່ອທີ່ຂ້ອຍຈະໄດ້ມີຄວາມຊອບໃນສາຍຕາຂອງທ່ານ."
6ພວກຄົນນຳຂ່າວໄດ້ກັບມາຫາຢາໂຄບແລະໄດ້ເວົ້າວ່າ, "ພວກເຮົາໄດ້ໄປຫາເອຊາວອ້າຍຂອງທ່ານແລ້ວ. ເພິ່ນກຳລັງມາເພື່ອຈະພົບທ່ານ,
ແລະມີຜູ້ຊາຍສີ່ຮ້ອຍຄົນມາກັບເພິ່ນ."7ຢາໂຄບກໍໄດ້ມີຄວາມຢ້ານກົວ ແລະອຸກໃຈ. ດັ່ງນັ້ນ ເຂົາຈຶ່ງໄດ້ແບ່ງພວກຄົນທີ່ມາກັບເຂົາເປັນສອງພວກ,
ແລະແຍກຝູງສັດລ້ຽງຝູງແກະ, ຝູງແບ້, ຝູງງົວ, ແລະ ຝູງອູດອອກເປັນສອງພວກດ້ວຍ.8ເຂົາໄດ້ເວົ້າວ່າ, "ຖ້າເອຊາວມາພົບພວກກຸ່ມທີ່ໜຶ່ງ
ແລະໂຈມຕີ, ຈາກນັ້ນພວກກຸ່ມທີສອງທີ່ເຫລືອຈະໄດ້ໜີທັນ."
9ຢາໂຄບໄດ້ເວົ້າວ່າ, "ໂອ ພຣະເຈົ້າຂອງອັບຣາຮາມ,ບັນພຣະບູຣຸດຂອງຂ້ານ້ອຍ, ແລະພຣະເຈົ້າຂອງອີຊາກ,ຜູ້ເປັນພໍ່ຂອງຂ້ານ້ອຍ,
ພຣະຢາເວຜູ້ໄດ້ກ່າວກັບຂ້ານ້ອຍວ່າ, "ຈົ່ງກັບໄປຍັງພູມລຳເນົາຂອງເຈົ້າ, ແລະຍາດພີ່ນ້ອງ ຂອງເຈົ້າ ແລະເຮົາຈະໃຫ້ເຈົ້າຈະເລີນຮຸ່ງເຮືອງ,
10ຂ້ານ້ອຍບໍ່ມີຄ່າພໍກັບການກະທຳທັງສິ້ນຂອງພຣະອົງຕາມພັນທະສັນຍາແຫ່ງຄວາມສັດຊື່ ແລະຄວາມໄວ້ວາງໃຈທີ່ຊົງຄຸນຄ່າທັງໝົດທີ່ພຣະອົງ
ໄດ້ຊົງກະທຳເພື່ອຜູ້ຮັບໃຊ້ຂອງພຣະອົງ. ເພາະດ້ວຍພຽງໄມ້ເທົ້າຂອງພຣະອົງ ຂ້ານ້ອຍໄດ້ຂວ້າມແມ່ນໍ້າຈໍແດນນີ້, ແລະດຽວນີ້ຂ້ານ້ອຍເປັນຄົນ
ສອງເຜົ່າ.
11ຂໍຊົງໂຜດຊ່ວຍກູ້ຂ້ານ້ອຍ ຈາກເງື້ອມມືຂອງອ້າຍຂອງຂ້ານ້ອຍ. ຈາກມືຂອງເອຊາວ, ເພາະຂ້ານ້ອຍຢ້ານວ່າ, ເຂົາຈະມາ ແລະໂຈມຕີຂ້ານ້ອຍ
ແລະແມ່ທັງຫລາຍ ແລະເດັກນ້ອຍ.12ແຕ່ ພຣະອົງໄດ້ກ່າວວ່າ, "ເຮົາຈະເຮັດໃຫ້ເຈົ້າຈະເລີນຮຸ່ງເຮືອງແນ່ນອນ. ເຮົາຈະເຮັດໃຫ້ເຊື້ອສາຍ
ທັງຫລາຍຂອງເຈົ້າເປັນເຫມືອນ ດັ່ງເມັດຊາຍແຫ່ງທ້ອງທະເລ, ຊຶ່ງບໍ່ສາມາດນັບຈຳນວນພວກເຂົາໄດ້.""
13ຢາໂຄບໄດ້ພັກທີ່ນັ້ນຄືນນັ້ນ. ເຂົາໄດ້ເອົາບາງສິ່ງທີ່ເຂົາມີຢູ່ກັບເຂົາຈັດເປັນຂອງກຳນັນສຳລັບເອຊາວ, ອ້າຍຂອງເຂົາ:14ແບ້ໂຕແມ່ 200 ໂຕ,
ແລະ ແບ້ໂຕຜູ້ 20 ໂຕ, ແກະໂຕແມ່ 200 ໂຕ, ແລະ ແກະໂຕຜູ້ 20 ໂຕ,15ອູດທີ່ກຳລັງໃຫ້ນົມຢູ່ 30 ໂຕ, ແລະ
ລູກອູດໂຕຜູ້ທັງຫລາຍຂອງພວກເຂົາ, ງົວໂຕແມ່ 40 ໂຕ, ແລະງົວໂຕຜູ້ 10 ໂຕ, ລໍໂຕແມ່ 20 ໂຕ, ແລະ ລໍໂຕຜູ້10 ໂຕ.16ເຂົາໄດ້ມອບສັດ
ເຫລົ່ານີ້ໄວ້ໃນມືພວກຄົນຮັບໃຊ້ຂອງເຂົາ, ແຕ່ລະຝູງແຍກກຸ່ມກັນ. ເຂົາໄດ້ເວົ້າພວກຄົນຮັບໃຊ້ຂອງເຂົາວ່າ, "ຈົ່ງໄປຂ້າງໜ້າຂອງເຮົາ ແລະ
ປ່ອຍໄລຍະຫ່າງລະຫວ່າງແຕ່ລະຝູງ."
17ເຂົາໄດ້ສັ່ງໃຫ້ຄົນຮັບໃຊ້ຜູ້ທີ່ໜຶ່ງເວົ້າວ່າ, "ເວລາເອຊາວອ້າຍຂອງເຮົາ ພົບພວກເຈົ້າ, ແລະຖາມວ່າ, "ພວກເຈົ້າເປັນຄົນຂອງໃຜ?
ພວກເຈົ້າກຳລັງຈະໄປໃສ? ໃຜເປັນເຈົ້າຂອງຝູງສັດທີ່ຢູ່ຕໍ່ໜ້າຂອງພວກເຈົ້າ?"18ຈາກນັ້ນພວກເຈົ້າຈະຕ້ອງຕອບວ່າ, "ພວກມັນເປັນຂອງຢາໂຄບ.
ຄົນຮັບໃຊ້ຂອງທ່ານ ພວກມັນເປັນຂອງຕ້ອນທີ່ໄດ້ສົ່ງໄປໃຫ້ເອຊາວ. ເຈົ້ານາຍຂອງເພິ່ນ, ເບິ່ງເຖີດ ເຂົາກຳລັງຕາມພວກເຮົາມາ.""
19ຢາໂຄບໄດ້ສັ່ງຄົນໃຊ້ກຸ່ມທີສອງ, ແລະກຸ່ມທີສາມ, ແລະຜູ້ຊາຍທັງໝົດທີ່ຕິດຕາມຝູງສັດທັງຫລາຍ. ເຂົາໄດ້ເວົ້າວ່າ,"ເມື່ອພວກເຈົ້າພົບ
ເອຊາວ ພວກເຈົ້າຈະຕ້ອງເວົ້າກັບເຂົາຢ່າງດຽວກັນ.20ພວກເຈົ້າຕ້ອງເວົ້າດ້ວຍວ່າ, "ຢາໂຄບຄົນຮັບໃຊ້ຂອງທ່ານກຳລັງຕາມພວກເຮົາມາ.""
ເພາະເຂົາໄດ້ຄິດວ່າ,"ຂອ້ຍຈະປອບໃຈເພິ່ນດ້ວຍພວກຂອງຕ້ອນທີ່ຂ້ອຍກຳລັງສົ່ງໄປລ່ວງໜ້າ. ຈາກນັ້ນພາຍຫລັງ, ເມື່ອຂ້ອຍຈະພົບລາວ ບາງທີ
ລາວອາດຈະຍອມຮັບຂ້ອຍ."21ດັ່ງນັ້ນຂອງຕ້ອນທັງຫລາຍຈຶ່ງໄດ້ຖືກສົ່ງໄປກ່ອນໜ້າເຂົາ. ຕົວເຂົາເອງຢູ່ຄ້າງຄືນຢູ່ທີ່ຄ້າຍພັກ.
22ຢາໂຄບໄດ້ຕື່ນຂຶ້ນໃນຕອນກາງຄືນ, ແລະນຳເອົາເມຍທັງສອງຂອງເຂົາ, ຄົນຮັບໃຊ້ຍິງທັງສອງຂອງເຂົາ, ແລະລູກຊາຍສິບເອັດຄົນຂອງເຂົາເ
ຂົາໄດ້ສົ່ງພວກເຂົາຂວ້າມທີ່ຕື້ນຂອງແມ່ນໍ້າຢັບໂບກ.23ດ້ວຍວິທີນີ້ ເຂົາໄດ້ສົ່ງພວກເຂົາຂວ້າມແມ່ນໍ້າໄປກັບຊັບສິນຂອງເຂົາທັງໝົດ.
24ຢາໂຄບຖືກປະໃຫ້ຢູ່ຄົນດຽວ, ແລ້ວມີຜູ້ຊາຍຄົນໜຶ່ງມາກຸມປ້ຳສູ້ກັບເຂົາຈົນເຖິງຮຸ່ງເຊົ້າ.25ເມື່ອຜູ້ຊາຍຄົນນັ້ນໄດ້ເຫັນວ່າ, ຕົນບໍ່
ສາມາດເອົາຊະນະຢາໂຄບໄດ້. ເຂົາໄດ້ທຸບແອວຂອງຢາໂຄບຈົນພິກໂບກເມື່ອເຂົາໄດ້ປ້ຳສູ້ກັບຊາຍຄົນນັ້ນ.26ຊາຍຜູ້ນັ້ນໄດ້ເວົ້າວ່າ, "ປ່ອຍ
ເຮົາໄປເທາະ, ເພາະກຳລັງຈະເຊົ້າແລ້ວ." ຢາໂຄບໄດ້ເວົ້າວ່າ, "ຂ້ອຍຈະບໍ່ປ່ອຍທ່ານໄປ, "ນອກຈາກທ່ານຈະອວຍພອນຂ້ອຍກ່ອນ."
27ຜູ້ຊາຍຄົນນັ້ນໄດ້ຖາມເຂົາວ່າ, "ເຈົ້າຊື່ຫຍັງ?" ຢາໂຄບໄດ້ຕອບວ່າ, "ຢາໂຄບ."28ຜູ້ຊາຍຄົນນັ້ນໄດ້ເວົ້າວ່າ, "ຊື່ຂອງເຈົ້າຈະບໍ່ຖືກເອີ້ນວ່າ
ຢາໂຄບອີກຕໍ່ໄປ, ແຕ່ຈະຖືກເອີ້ນວ່າອິສະຣາເອນ. ເພາະວ່າເຈົ້າໄດ້ຕໍ່ສູ້ກັບພຣະເຈົ້າ ແລະພວກຜູ້ຊາຍ ແລະໄດ້ຮັບໄຊຊະນະ."
29ຢາໂຄບໄດ້ເວົ້າກັບເຂົາວ່າ, "ກະລຸນາບອກຊື່ຂອງທ່ານໃຫ້ຂ້ອຍຮູ້ແດ່." ເຂົາໄດ້ເວົ້າວ່າ, "ເປັນຫຍັງເຈົ້າຈຶ່ງຖາມຊື່ຂອງເຮົາ?"ຊາຍຄົນນັ້ນຈຶ່ງໄດ້
ອວຍພອນເຂົາທີ່ນັ້ນ.30ຢາໂຄບໄດ້ເອີ້ນຊື່ສະຖານທີ່ນັ້ນວ່າເປນີເອນ, ເພາະເຂົາໄດ້ເວົ້າວ່າ, "ຂ້ອຍໄດ້ເຫັນພຣະເຈົ້າໜ້າຕໍ່ໜ້າ, ແລະຊີວິດຂອງ
ຂ້ອຍຍັງຢູ່ຕໍ່ໄປ."
31ເມື່ອຢາໂຄບອອກໄປຈາກເປນີເອນ ຕາເວັນກໍກຳລັງຂຶ້ນ. ເພິ່ນຍ່າງຂາເຢັກໄປ ເພາະເຈັບແອວ.32ນີ້ຄືສາເຫດທີ່ຊາວອິສະຣາເອນ ທຸກມື້ນີ້ບໍ່ກິນ
ຊີ້ນເອັນທີ່ຕໍ່ກັບແອວ ຊຶ່ງຢູ່ທີ່ຂໍ້ຕໍ່ແອວ, ເພາະວ່າຊາຍຄົນນັ້ນເຮັດໃຫ້ເອັນເຫລົ່ານັ້ນບາດເຈັບ ຂະນະທີ່ແອວຂອງຢາໂຄບບາດເຈັບ.

 generated on Tue Jun 17 19:01:42 2025

33 [1]ຢາໂຄບໄດ້ຫລຽວຂຶ້ນໄປດູ ແລະເບິ່ງເຖິດ,ເອຊາວກຳລັງເຂົ້າມາ, ພ້ອມກັບຜູ້ຊາຍສີ່ຮ້ອຍຄົນ. ຢາໂຄບໄດ້ແບ່ງ
ເດັກທັງຫລາຍທ່າມກາງເລອາ, ຣາເຊັນ, ແລະຍິງຮັບໃຊ້ທັງສອງ.[2]ຈາກນັ້ນເຂົາໄດ້ໃຫ້ພວກຍິງຮັບໃຊ້ ແລະລູກທັງຫລາຍຂອງພວກເຂົາ
ຢູ່ຂ້າງຫນ້າ, ຕາມດ້ວຍເລອາ ແລະລູກທັງຫລາຍຂອງນາງ, ແລະຕາມດ້ວຍຣາເຊັນກັບໂຢເຊັບຢູ່ທາງຫລັງ.[3]ຕົວເຂົາເອງຢູ່ຂ້າງຫນ້າພວກເຂົາ.
ເຂົາໄດ້ໂຄ້ງຄຳນັບລົງເຖິງພື້ນເຈັດເທື່ອຈົນເຂົາໄດ້ເຂົ້າມາໃກ້ອ້າຍຂອງເຂົາ.

[4]ເອຊາວໄດ້ແລ່ນໄປພົບເຂົາ, ໄດ້ສວມກອດເຂົາກອດຄໍເຂົາ, ແລະຈູບເຂົາ. ຈາກນັ້ນພວກເຂົາພາກັນຮ້ອງໄຫ້.[5]ເມື່ອເອຊາວມືນຕາຂຶ້ນເບິ່ງ,
ເຂົາໄດ້ເຫັນພວກຜູ້ຍິງ ແລະເດັກທັງຫລາຍ. ລາວຈຶ່ງຖາມວ່າ,"ຄົນເຫລົ່ານີ້ທີ່ມານຳເຈົ້ານີ້ເປັນໃຜ?" ຢາໂຄບໄດ້ຕອບວ່າ, "ບັນດາລູກ
ທັງຫລາຍທີ່ພຣະເຈົ້າ ຊຶ່ງມີພຣະເມດຕາປຣະທານໃຫ້ຜູ້ຮັບໃຊ້ຂອງທ່ານ."
[6]ຈາກນັ້ນພວກຍິງຮັບໃຊ້ໄດ້ເຂົ້າມາຂ້າງຫນ້າ ພ້ອມກັບລູກທັງຫລາຍຂອງພວກນາງ, ແລະພວກເຂົາໄດ້ໂຄ້ງຄຳນັບ.[7]ຕໍ່ມາເລອາພ້ອມ
ທັງຫລານລູກທັງຫລາຍຂອງນາງ ໄດ້ເຂົ້າມາຂ້າງຫນ້າ ແລະໂຄ້ງຄຳນັບດ້ວຍ. ສຸດທ້າຍແມ່ນຣາເຊັນ ພ້ອມດ້ວຍ
ໂຢເຊັບໄດ້ເຂົ້າມາຂ້າງຫນ້າແລະໂຄ້ງຄຳນັບ.[8]ເອຊາວໄດ້ຖາມວ່າ,"ເຈົ້າຫມາຍຄວາມວ່າຢ່າງໃດກັບບັນດາສິ່ງເຫລົ່ານີ້ທີ່ເຮົາໄດ້ເຫັນ?" ຢາໂຄບ
ຕອບວ່າ,"ເພື່ອໃຫ້ເປັນທີ່ຊອບໃນສາຍຕາຂອງເຈົ້ານາຍຂອງຂ້ອຍ."
[9]ເອຊາວໄດ້ເວົ້າວ່າ, "ເຮົາມີພຽງພໍຢູ່ແລ້ວ, ນ້ອງເຮົາເອີຍ. ຈົ່ງເກັບໄວ້ສິ່ງທີ່ເຈົ້າມີໄວ້ເພື່ອຕົວເຈົ້າເອງເທາະ."[10]ຢາໂຄບໄດ້ເວົ້າວ່າ, "ຢ່າເລີຍ,
ກະລຸນາເທາະ, ຫາກຂ້ອຍເປັນທີ່ຊອບໃນສາຍຕາຂອງທ່ານ, ກໍຂໍໃຫ້ຮັບຂອງຕ້ອນຂອງຂ້ອຍຈາກມືຂອງຂ້ອຍ, ເພາະທີ່ຈິງແລ້ວເມື່ອຂ້ອຍໄດ້ເຫັນ
ຫນ້າທ່ານກໍ ເຫມືອນກຳລັງເຫັນຫນ້າພຣະເຈົ້າ, ແລະທ່ານໄດ້ຍອມຮັບຂ້ອຍ.[11]ກະລຸນາຮັບຂອງຕ້ອນຂອງຂ້ອຍທີ່ນຳມາໃຫ້ທ່ານ,
ເພາະພຣະເຈົ້າໄດ້ຊົງກະທຳກັບຂ້ອຍດ້ວຍຄວາມເມດຕາ, ແລະເພາະວ່າຂ້ອຍມີພຽງພໍແລ້ວ." ຢາໂຄບໄດ້ຂະຍັ້ນຂະຍໍເຂົາ,
ແລະເອຊາວກໍໄດ້ຮັບຂອງຕ້ອນໄວ້.
[12]ຈາກນັ້ນເອຊາວໄດ້ເວົ້າວ່າ, "ໃຫ້ເຮົາເດີນທາງກັນເທາະ. ເຮົາຈະໄປຂ້າງຫນ້າເຈົ້າ."[13]ຢາໂຄບໄດ້ເວົ້າກັບເຂົາວ່າ, "ເຈົ້ານາຍຂອງຂ້ອຍຮູ້ແລ້ວ
ວ່າພວກເດັກໆຍັງອ່ອນຢູ່, ແລະ ພວກແກະ ແລະ ຝູງສັດລ້ຽງກຳລັງລ້ຽງລູກອ່ອນຂອງພວກມັນ. ຖ້າພວກມັນຖືກໄລ່ຢ່າງຮີບເຮັ່ງແມ່ນແຕ່ມື້ດຽວ
, ສັດເຫລົ່ານີ້ກໍຈະຕາຍຫມົດ.[14]ຂໍໃຫ້ເຈົ້ານາຍຂອງຂ້ອຍລ່ວງຫນ້າໄປກ່ອນຜູ້ຮັບໃຊ້ຂອງທ່ານ. ຂ້ອຍຈະຄ່ອຍໆເດີນທາງໄປຊ້າໆ,
ຕາມກຳລັງຂອງຝູງສັດລ້ຽງທີ່ຢູ່ຂ້າງຫນ້າຂ້ອຍ, ແລະ ຕາມກຳລັງຂອງພວກເດັກໆ, ຈົນກວ່າຂ້ອຍຈະໄປພົບເຈົ້ານາຍຂອງຂ້ອຍທີ່ເອໂດມ."
[15]ເອຊາວໄດ້ເວົ້າວ່າ, "ເຮົາຈະໃຫ້ຄົນຂອງເຮົາທີ່ຢູ່ກັບເຮົາບາງສ່ວນຢູ່ກັບເຈົ້າ." ແຕ່ຢາໂຄບຕອບວ່າ, "ເປັນຫຍັງຕ້ອງເຮັດຢ່າງນັ້ນ?
ເຈົ້ານາຍຂອງຂ້ອຍ ໄດ້ມີເມດຕາຕໍ່ຂ້ອຍພຽງພໍແລ້ວ."[16]ດັ່ງນັ້ນເອຊາວຈຶ່ງໄດ້ອອກເດີນທາງກັບເອໂດມໃນວັນນັ້ນ.[17]ສ່ວນຢາໂຄບໄດ້ເດີນທາງໄປ
ເຖິງຊຸກໂກດ, ໄດ້ສ້າງບ້ານສຳລັບຕົວເຂົາເອງ, ແລະ ໄດ້ສ້າງຄອກທັງຫລາຍສຳລັບຝູງສັດລ້ຽງຂອງເຂົາ. ສະຖານທີ່ນັ້ນຈຶ່ງຖືກເອີ້ນຊື່ວ່າ
ຊຸກໂກດ.
[18]ເມື່ອຢາໂຄບໄດ້ມາ ຈາກປັດດານອາຣຳ, ເຂົາໄດ້ມາເຖິງເມືອງຊີເຄມ, ຊຶ່ງຢູ່ໃນແຜ່ນດິນການາອານຢ່າງປອດໄພ. ເຂົາໄດ້ຕັ້ງຄ້າຍພັກຢູ່ໃກ້
ເມືອງນັ້ນ.[19]ຈາກນັ້ນເຂົາຊື້ທີ່ດິນຜືນຫນຶ່ງທີ່ເຂົາໄດ້ຕັ້ງເຕັນຂອງເຂົາຈາກ ລູກຊາຍທັງຫລາຍ ຂອງຮາໂມ, ພໍ່ຂອງ
ຊີເຄມດ້ວຍເງິນຫນຶ່ງຮ້ອຍຫລຽນ.[20]ທີ່ນັ້ນເຂົາໄດ້ສ້າງແທ່ນບູຊາແລະເອີ້ນມັນວ່າ, ເອວເອໂລເຮ, ພຣະເຈົ້າຂອງຊາດອິສະຣາເອນ.


generated on Tue Jun 17 19:01:42 2025

34 [1]ນາງດີນາ, ລູກສາວຂອງເລອາຜູ້ທີ່ນາງ ໄດ້ໃຫ້ກຳເນີດແກ່ຢາໂຄບ, ໄດ້ອອກໄປພົບຍິງສາວຂອງແຜ່ນດິນນັ້ນ.[2]ຊີເຄມລູກຊາຍຂອງຮາໂມ
ຊາວຮີວີ, ເຈົ້າຊາຍຂອງແຜ່ນດິນນັ້ນໄດ້ເຫັນນາງ, ແລະເຂົາໄດ້ດຶງນາງ, ແລະໄດ້ບັງຄັບຂືນໃຈນາງ, ແລະໄດ້ຫລັບນອນກັບນາງ.
[3]ເຂົາໄດ້ຫລົງໄຫລນາງດີນາ, ລູກສາວຂອງຢາໂຄບ. ເຂົາໄດ້ຮັກຍິງສາວ ແລະໄດ້ເວົ້າຢ່າງອ່ອນໂຍນກັບນາງ.

[4]ຊີເຄມໄດ້ເວົ້າກັບຮາໂມ, ພໍ່ຂອງເຂົາກ່າວວ່າ, "ໄປຂໍຍິງສາວນີ້ໃຫ້ເປັນເມຍຂອງລູກເຖີດ."[5]ຂະນະນັ້ນຢາໂຄບ
ໄດ້ຍິນເລື່ອງທີ່ເຂົາໄດ້ກະທຳເສື່ອມເສຍກັບດີນາ ລູກສາວຂອງເຂົາ. ລູກຊາຍທັງຫລາຍຂອງເຂົາ ໄດ້ກຳລັງຢູ່ກັບຝູງສັດລ້ຽງຂອງເຂົາທີ່ທົ່ງນາ,
ດັ່ງນັ້ນຢາໂຄບຈຶ່ງໄດ້ສະຫງົບສະຕິອາລົມຈົນພວກເຂົາທັງຫລາຍໄດ້ກັບເຂົ້າມາ.
[6]ຮາໂມພໍ່ຂອງຊີເຄມໄດ້ອອກໄປຫາຢາໂຄບເພື່ອທີ່ຈະເວົ້າກັບເຂົາ.[7]ລູກຊາຍທັງຫລາຍຂອງຢາໂຄບ ໄດ້ກັບເຂົ້າມາຈາກທົ່ງນາ.
ແລະເມື່ອພວກເຂົາໄດ້ຍິນເລື່ອງນີ້. ພວກຜູ້ຊາຍທັງຫລາຍຕ່າງບໍ່ພໍໃຈ. ພວກເຂົາໄດ້ໂກດແຄ້ນເປັນຢ່າງຍິ່ງ
ເພາະວ່າເຂົາເຮັດໃຫ້ອິສະຣາເອນເສື່ອມເສຍ, ໂດຍການໃຊ້ກຳລັງຂອງເຂົາເອງໃນເລື່ອງລູກສາວຂອງຢາໂຄບ.
[8]ຮາໂມໄດ້ເວົ້າກັບພວກເຂົາ, ກ່າວວ່າ, "ຊີເຄມ ລູກຊາຍຂອງຂ້ອຍຫລົງຮັກລູກສາວຂອງທ່ານ. ກະລຸນາຍົກນາງໃຫ້ເປັນເມຍຂອງເຂົາເຖີດ.[9]ໃຫ້
ພວກເຮົາມາຕົກລົງກັນວ່າ, ຄົນຂອງຂ້ອຍ, ແລະຄົນຂອງເຈົ້າແຕ່ງງານກັນໄດ້.[10]ທ່ານຈະອາໄສຢູ່ກັບເຮົາ, ແລະແຜ່ນດິນຈະ
ເປີດໃຫ້ທ່ານທີ່ຈະອາໄສແລະຄ້າຂາຍ, ແລະເພື່ອທີ່ຈະເຂົ້າຖືສິດໃນຊັບສິນ."
[11]ຊີເຄມໄດ້ເວົ້າກັບພໍ່ຂອງນາງ ແລະພວກອ້າຍຂອງນາງວ່າ, "ຂໍໃຫ້ຂ້ານ້ອຍເປັນທີ່ຊອບໃນສາຍຕາຂອງພວກທ່ານ,
ແລະທ່ານຈະຮຽກຮ້ອງສິ່ງໃດຂ້ານ້ອຍກໍຈະໃຫ້.[12]ຈະຮຽກຮ້ອງຄ່າດອງທອງຫມັ້ນຈຳນວນມະຫາສານ, ແລະຂອງຂວັນຕາມໃຈຂອງທ່ານ
ແລະຂ້ານ້ອຍຈະໃຫ້ທຸກສິ່ງທີ່ພວກເຈົ້າຂໍມາ, ແຕ່ຂໍໃຫ້ຍົກຍິງສາວນັ້ນເປັນເມຍຂ້ານ້ອຍ."[13]ພວກລູກຊາຍຂອງຢາໂຄບໄດ້ຕອບຊີເຄມ ແລະ
ຮາໂມພໍ່ຂອງເຂົາຢ່າງມີເລ້ຫລ່ຽມ, ເພາະຊີເຄມໄດ້ເຮັດໃຫ້ດີນານ້ອງສາວຂອງພວກເຂົາເສື່ອມເສຍ.
[14]ພວກເຂົາໄດ້ເວົ້າກັບເຂົາ, ພວກເຮົາບໍ່ສາມາດຈະເຮັດສິ່ງນີ້ໄດ້, ຄືການຍົກນ້ອງສາວຂອງພວກເຮົາ ໃຫ້ກັບໃຜຄົນໃດຄົນຫນຶ່ງທີ່ບໍ່ໄດ້ຮັບ
ພິທີຕັດ; ເພາະວ່າມັນເປັນການເຮັດໃຫ້ເຮົາເສຍກຽດສັກສີສຳລັບພວກເຮົາ.[15]ມີທາງດຽວເທົ່ານັ້ນທີ່ພວກເຮົາຈະຕົກລົງກັບພວກທ່ານໄດ້ກໍຄື:
ຖ້າພວກທ່ານຈະຮັບພິທີຕັດເຫມືອນພວກເຮົາ, ຖ້າຜູ້ຊາຍທຸກຄົນທ່າມກາງພວກທ່ານຮັບພິທີຕັດ.[16]ຈາກນັ້ນພວກເຮົາຈະຍົກ
ລູກສາວຂອງພວກເຮົາໃຫ້ພວກທ່ານ, ແລະພວກເຮົາຈະຮັບລູກສາວທັງຫລາຍຂອງພວກທ່ານມາເພື່ອພວກເຮົາ,
ແລະພວກເຮົາຈະອາໄສຢູ່ກັບພວກທ່ານ ແລະກາຍເປັນປະຊາຊົນຊາດດຽວກັນ.[17]ແຕ່ຖ້າພວກທ່ານບໍ່ຟັງພວກເຮົາ ໃນການທີ່ຈະຮັບພິທີຕັດ,
ພວກເຮົາກໍຈະເອົານ້ອງສາວຂອງພວກເຮົາຄືນມາ ແລະພວກເຮົາກໍຈະຈາກໄປ."
[18]ຄຳເວົ້າຂອງພວກເຂົາເຮັດໃຫ້ຮາໂມ ແລະຊີເຄມລູກຊາຍຂອງເຂົາພໍໃຈ.[19]ຊາຍຫນຸ່ມນັ້ນບໍ່ໄດ້ລີລໍທີ່ຈະປະຕິບັດຕາມໃນສິ່ງທີ່ພວກເຂົາໄດ້ເວົ້າ,
ເພາະວ່າເຂົາເພິ່ງພໍໃຈໃນຕົວລູກສາວຂອງຢາໂຄບ, ແລະເພາະວ່າເຂົາໄດ້ເປັນຄົນທີ່ໄດ້ຮັບກຽດຫລາຍທີ່ສຸດ. ໃນບັນດາຄົນທັງຫລາຍໃນ
ຄົວເຮືອນຂອງພໍ່ເຂົາ.
[20]ຮາໂມ ແລະຊີເຄມລູກຊາຍຂອງເຂົາໄດ້ໄປທີ່ປະຕູເມືອງຂອງພວກເຂົາ ແລະໄດ້ເວົ້າກັບບັນດາຜູ້ຊາຍຂອງຊາວເມືອງຂອງ, ເຂົາກ່າວວ່າ,[21]"ຄົນ
ພວກນີ້ຢູ່ກັບພວກເຮົາຢ່າງສັນຕິ, ດັ່ງນັ້ນຂໍໃຫ້ພວກເຂົາໄດ້ອາໄສຢູ່ໃນດິນແດນນີ້ ແລະຄ້າຂາຍເຖີ້ນ, ທີ່ຈິງແລ້ວແຜ່ນດິນນັ້ນກໍກວ້າງຂວາງ
ພຽງພໍສຳລັບພວກເຂົາ. ໃຫ້ພວກເຮົາຮັບລູກສາວຂອງພວກເຂົາມາເປັນເມຍກັບລູກຊາຍຂອງພວກເຮົາ, ແລະໃຫ້ພວກເຮົາຍົກລູກສາວຂອງ
ພວກເຮົາໃຫ້ພວກເຂົາ.
[22]ດ້ວຍພຽງເງື່ອນໄຂນີ້ພວກຜູ້ຊາຍຕົກລົງທີ່ຈະອາໄສຢູ່ກັບພວກເຮົາ ແລະກາຍເປັນປະຊາຊົນຫນຶ່ງດຽວຄື: ຖ້າຜູ້ຊາຍທຸກຄົນ
ໃນທ່າມກາງພວກເຮົາຈະຮັບພິທີຕັດ,ເຫມືອນທີ່ພວກເຂົາໄດ້ຮັບພິທີຕັດ.[23]ຝູງສັດລ້ຽງ, ຊັບສິນ, ແລະສັດທັງຫລາຍຂອງພວກເຂົາ ຈະບໍ່ຕົກເປັນ
ຂອງພວກເຮົາບໍ? ດັ່ງນັ້ນໃຫ້ພວກເຮົາຕົກລົງກັບພວກເຂົາ, ແລະພວກເຂົາຈະອາໄສຢູ່ທ່າມກາງພວກເຮົາ."
[24]ຜູ້ຊາຍທຸກຄົນຈຶ່ງພາກັນຮັບພິທີຕັດ.[25]ໃນວັນທີສາມຂະນະທີ່ພວກຜູ້ຊາຍຊາວເມືອງຍັງເຈັບປວດຢູ່, ລູກຊາຍສອງຄົນຂອງຢາໂຄບ(ຄືຊີເມໂອນ
ແລະເລວີພວກອ້າຍຂອງດີນາ), ແຕ່ລະຄົນໄດ້ເອົາດາບຂອງເຂົາ ແລະພວກເຂົາໄດ້ເຂົ້າໂຈມຕີເມືອງນັ້ນທີ່ຫມັ້ນໃຈວ່າຕົນເອງປອດໄພ, ແລະ
ພວກເຂົາໄດ້ຂ້າພວກຜູ້ຊາຍທັງຫມົດ[26]ພວກເຂົາໄດ້ຂ້າຮາໂມ ແລະຊີເຄມລູກຊາຍຂອງເຂົາດ້ວຍຄົມດາບ. ພວກເຂົາໄດ້ເອົາດີນາອອກຈາກ
ເຮືອນຂອງຊີເຄມ ແລະໄດ້ຫນີອອກໄປ.
[27]ພວກລູກຊາຍຄົນອື່ນໆຂອງຢາໂຄບໄດ້ເຂົ້າມາທີ່ຊາກສົບ ແລະໄດ້ປຸ້ນສະດົມເມືອງນັ້ນ, ເພາະວ່າປະຊາຊົນຂອງເມືອງນັ້ນ ເຮັດໃຫ້ນ້ອງສາວ
ຂອງພວກເຂົາເຊື່ອມເສຍ.[28]ພວກເຂົາໄດ້ຍຶດເອົາສັດທັງຫລາຍຂອງພວກເຂົາ, ແລະທຸກສິ່ງທຸກຢ່າງຂອງເຂົາໃນເມືອງນັ້ນ, ແລະໃນທົ່ງນາ
ຮອບໆ[29]ຄວາມມັ່ງຄັ່ງທັງຫມົດຂອງພວກເຂົາ. ພວກເຂົາໄດ້ຈັບເອົາຜູ້ຍິງ ແລະເດັກນ້ອຍທັງຫລາຍ. ພວກເຂົາໄດ້ເອົາຂອງທຸກສິ່ງທີ່ຢູ່ໃນເຮືອນໄປ
ຈົນກ້ຽງ.
[30]ຢາໂຄບໄດ້ເວົ້າກັບຊີເມໂອນ ແລະເລວີວ່າ,"ພວກເຈົ້າໄດ້ນຳຄວາມລຳບາກມາສູ່ເຮົາ, ເຮັດໃຫ້ເຮົາເຊື່ອມຊາມລົງ ໃນຜູ້ທີ່ອາໄສໃນແຜ່ນດິນນັ້ນ
ຄືຄົນການາອານ, ແລະຊາວເປຣີຊີ. ເຮົາມີຄົນຈຳນວນນ້ອຍ. ຖ້າພວກເຂົາລວມຕົວເປັນພວກດຽວກັນມາຕໍ່ຕ້ານເຮົາ ແລະໂຈມຕີເຮົາຈະຕ້ອງຖືກ
ທຳລາຍ, ເຮົາແລະຄົວເຮືອນຂອງເຮົາ."[31]ແຕ່ຊີເມໂອນ ແລະເລວີໄດ້ຕອບວ່າ, "ຄວນບໍທີ່ຊີເຄມໄດ້ກະທຳຕໍ່ນ້ອງສາວຂອງພວກເຮົາເຫມືອນ
ຍິງໂສເພນີ?"


generated on Tue Jun 17 19:01:42 2025

35 [1]ພຣະເຈົ້າໄດ້ບອກກັບຢາໂຄບວ່າ, "ຈົ່ງລຸກຂຶ້ນ, ຈົ່ງໄປທີ່ເບັດເອນ, ແລະຢູ່ທີ່ນັ້ນ. ຈົ່ງສ້າງແທ່ນບູຊາຖວາຍແກ່ພຣະເຈົ້າທີ່ນັ້ນ,
ພຣະເຈົ້າຜູ້ໄດ້ຊົງປາກົດແກ່ເຈົ້າ ເມື່ອເຈົ້າໄດ້ຫນີຈາກເອຊາວ ອ້າຍຂອງເຈົ້າ."[2]ຈາກນັ້ນ ຢາໂຄບໄດ້ເວົ້າກັບຄົນຢູ່ໃນຄົວເຮືອນຂອງເຂົາ
ແລະກັບຄົນທັງຫມົດທີ່ໄດ້ຢູ່ກັບເຂົາ,"ຈົ່ງປະຖິ້ມພະຂອງຄົນຕ່າງຊາດທັງຫລາຍທີ່ຢູ່ທ່າມກາງພວກເຈົ້າ, ຈົ່ງຊໍາລະຕົວພວກເຈົ້າເອງ
ແລະປ່ຽນເສື້ອຜ້າຂອງພວກເຈົ້າ.[3]ແລ້ວໃຫ້ພວກເຮົາອອກເດີນທາງ ແລະຂຶ້ນໄປເຖິງເບັດເອນ. ຂ້ອຍຈະສ້າງແທ່ນບູຊາຖວາຍແກ່ພຣະເຈົ້າທີ່ນັ້ນ
ພຣະອົງຜູ້ໄດ້ຊົງຕອບຂ້ອຍໃນວັນແຫ່ງຄວາມທຸກຍາກຂອງເຮົາ, ແລະໄດ້ຊົງສະຖິດຢູ່ນໍາຂ້ອຍບໍ່ວ່າຂ້ອຍຈະໄປທີ່ໃດ."

[4]ດັ່ງນັ້ນ ພວກເຂົາຈຶ່ງໄດ້ເອົາພະທັງຫມົດຂອງຄົນຕ່າງຊາດ ທີ່ມີຢູ່ທີ່ມືຂອງພວກເຂົາມອບໃຫ້ຢາໂຄບ,
ແລະຕ້າງຫູທັງຫລາຍທີ່ຢູ່ທີ່ຫູຂອງພວກເຂົາ ຢາໂຄບໄດ້ຝັງສິ່ງເຫລົ່ານັ້ນທີ່ໃຕ້ຕົ້ນໂອັກທີ່ຢູ່ໃກ້ຊີເຄມ.[5]ເມື່ອພວກເຂົາໄດ້ອອກເດີນທາງ,
ພຣະເຈົ້າໄດ້ຊົງເຮັດໃຫ້ ຊາວເມືອງທັງຫລາຍທີ່ຢູ່ຮອບໆເກີດຄວາມຢ້ານກົວພວກເຂົາ, ດັ່ງນັ້ນພວກປະຊາຊົນເຫລົ່ານັ້ນ ຈຶ່ງບໍ່ກ້າໄລ່ຕາມ
ພວກລູກຊາຍຂອງຢາໂຄບ.
[6]ຢາໂຄບໄດ້ມາເຖິງລູເຊ(ນັ້ນຄື, ເບັດເອນ), ຊຶ່ງຢູ່ໃນແຜ່ນດິນການາອານ, ເຂົາ ແລະຄົນທັງຫມົດທີ່ໄດ້ຢູ່ກັບເຂົາ.[7]ເຂົາໄດ້ສ້າງແທ່ນບູຊາທີ່ນັ້ນ
ແລະໄດ້ເອີ້ນສະຖານທີ່ນັ້ນວ່າ ເອນເບັດເອນ, ເພາະວ່າທີ່ນັ້ນພຣະເຈົ້າໄດ້ຊົງປາກົດພຣະອົງເອງແກ່ເຂົາ, ເມື່ອເຂົາກໍາລັງຫນີຈາກອ້າຍຂອງເຂົາ.
[8]ນາງເດໂບຣາ, ເອື້ອຍລ້ຽງຂອງນາງເຣເບກາໄດ້ເສຍຊີວິດ. ນາງໄດ້ຖືກຝັງໄວ້ໃຕ້ຕົ້ນໂອັກທີ່ຢູ່ທາງທິດໃຕ້ຂອງເບັດເອນ, ສະນັ້ນ ມັນ
ຈຶ່ງຖືກເອີ້ນວ່າ, ອັບໂລນບາຄູ "ຕົ້ນຫມາກກໍແຫ່ງນໍ້າຕາ."
[9]ເມື່ອຢາໂຄບກັບຈາກປັດດານອາຣໍາ, ພຣະເຈົ້າໄດ້ຊົງປາກົດແກ່ເຂົາອີກຄັ້ງ ແລະໄດ້ອວຍພອນເຂົາ.[10]ພຣະເຈົ້າໄດ້ເວົ້າກັບເຂົາວ່າ, "ຊື່
ຂອງເຈົ້າຄືຢາໂຄບ, ແຕ່ຊື່ຂອງເຈົ້າຈະບໍ່ຖືກເອີ້ນວ່າຢາໂຄບອີກຕໍ່ໄປ. ຊື່ຂອງເຈົ້າຈະເປັນອິສະຣາເອນ." ສະນັ້ນ ພຣະເຈົ້າຈຶ່ງໄດ້ຊົງເອີ້ນ
ຊື່ຂອງເຂົາວ່າ ອິສະຣາເອນ.
[11]ພຣະເຈົ້າໄດ້ກ່າວກັບເຂົາວ່າ,"ເຮົາຄືພຣະເຈົ້າອົງຊົງຣິດອໍານາດ, ຈົ່ງເກີດຜົນ ແລະເພີ່ມທະວີຄູນ. ຊົນຊາດຫນຶ່ງ ແລະບັນດາປະຊາຊາດ
ຈະອອກມາຈາກເຈົ້າ, ແລະກະສັດຫລາຍພະອົງຈະຢູ່ທ່າມກາງເຊື້ອສາຍທັງຫລາຍຂອງເຈົ້າ.[12]ດິນແດນທີ່ເຮົາໄດ້ມອບໃຫ້ອັບຣາຮາມ ແລະ
ອີຊາກ, ເຮົາຈະປຣະທານໃຫ້ແກ່ເຈົ້າ.ແກ່ເຊື້ອສາຍທັງຫລາຍຂອງເຈົ້າທີ່ຈະເກີດມາພາຍຫລັງເຈົ້າ. ເຮົາກໍຈະປຣະທານແຜ່ນດິນນັ້ນໃຫ້ດ້ວຍ."[13]
ພຣະເຈົ້າໄດ້ສະເດັດຂຶ້ນໄປຈາກສະຖານທີ່ພຣະອົງໄດ້ເວົ້າກັບເຂົາ.
[14]ຢາໂຄບໄດ້ຕັ້ງເສົາໃນສະຖານທີ່ນັ້ນທີ່ພຣະເຈົ້າໄດ້ກ່າວກັບເຂົາ ຄືເສົາຫີນຕົ້ນຫນຶ່ງ. ເຂົາໄດ້ເທເຄື່ອງດື່ມບູຊາເຫນືອເສົານັ້ນ ແລະເທນ້ໍາມັນ
ຫມາກກອກເທດເທິງເສົານັ້ນ.[15]ຢາໂຄບໄດ້ໃສ່ຊື່ສະຖານທີ່ນັ້ນ ທີ່ພຣະເຈົ້າໄດ້ກ່າວກັບເຂົາວ່າ ເບັດເອນ.
[16]ພວກເຂົາໄດ້ເດີນທາງຈາກເບັດເອນໄປ.ໃນຂະນະທີ່ພວກເຂົາຍັງຢູ່ຫ່າງຈາກເອຟຣາທາ, ນາງຣາເຊັນກໍເຈັບທ້ອງຈະອອກລູກ.
ນາງເຈັບທ້ອງຫລາຍ.[17]ໃນຂະນະທີ່ນາງໃກ້ຈະເກີດແລ້ວນັ້ນ, ນາງຜະດຸງຄັນກໍເວົ້າກັບນາງວ່າ, "ບໍ່ຕ້ອງຢ້ານ,ເພາະວ່າບັດນີ້, ເຈົ້າຈະໄດ້ລູກ
ຜູ້ຊາຍອີກຄົນຫນຶ່ງ."[18]ຂະນະທີ່ນາງກໍາລັງຈະຕາຍ, ດ້ວຍລົມຫາຍໃຈຄັ້ງສຸດທ້າຍ ນາງໄດ້ໃສ່ຊື່ໃຫ້ເຂົາວ່າ ເບັນໂອນີ, ແຕ່ພໍ່ຂອງເຂົາໄດ້ຕັ້ງຊື່
ເຂົາວ່າ ເບັນຢາມິນ.[19]ຣາເຊັນໄດ້ຕາຍໄປ ແລະຖືກຝັງໄວ້ ລະຫວ່າງທາງໄປເມືອງເອຟຣາທາ ນັ້ນຄືເບັດເລເຮັມ.[20]ຢາໂຄບໄດ້ຕັ້ງເສົາເ
ທິງຫລຸມສົບຂອງນາງ. ເປັນເຄື່ອງຫມາຍຫລຸມສົບຂອງນາງຣາເຊັນມາເຖິງເທົ່າທຸກວັນນີ້.
[21]ຢາໂຄບໄດ້ຍົກຍ້າຍໄປຕໍ່ ແລະໄດ້ຕັ້ງຄ້າຍພັກຂອງເຂົາທາງໃຕ້ຂອງຫໍຄອຍເອເດ ຂອງຝູງສັດ.[22]ຂະນະທີ່ອິສະຣາເອນກໍາລັງອາໄສຢູ່ໃນດິນແດນ
ນັ້ນ, ຣູເບັນໄດ້ຫລັບນອນກັບນາງບິນຮາ ເມຍນ້ອຍຂອງພໍ່ຂອງເຂົາ, ແລະອິສະຣາເອນກໍໄດ້ຮູ້ເລື່ອງນີ້. ບັດນີ້ຢາໂຄບມີລູກຊາຍສິບສອງຄົນ.
[23]ລູກຊາຍທັງຫລາຍຂອງເຂົາທີ່ເກີດຈາກນາງເລອາຄື: ຣູເບັນລູກຊາຍຫົວປີຂອງຢາໂຄບ, ແລະ ຊີເມໂອນ, ເລວີ, ຢູດາ, ອິດຊາຄາ, ແລະ
ເຊບູໂລນ.[24]ລູກຊາຍທັງຫລາຍຂອງເຂົາທີ່ເກີດຈາກນາງຣາເຊັນ ມີດັ່ງນີ້: ໂຢເຊັບ ແລະ ເບັນຢາມິນ.[25]ລູກຊາຍທັງຫລາຍຂອງເຂົາທີ່ເກີດຈາກນາງ
ບິນຮາ, ຍິງຮັບໃຊ້ຂອງຣາເຊັນຄື: ດານ ແລະເນັບທາລີ.
[26]ພວກລູກຊາຍຂອງນາງຊີລະປາ, ຍິງຮັບໃຊ້ຂອງນາງເລອາ ຄື: ກາດ ແລະອາເຊ. ທັງຫມົດເຫລົ່ານີ້ຄືພວກລູກຊາຍຂອງຢາໂຄບ ຜູ້ທີ່ໄດ້
ເກີດແກ່ເຂົາໃນປັດດານອາຣໍາ.[27]ຢາໂຄບໄດ້ມາຫາອີຊາກ, ພໍ່ຂອງຕົນທີ່ມໍາເຣ, ທີ່ເມືອງເຮັບໂຣນ, ບ່ອນທີ່ອັບຣາຮາມ ແລະອີຊາກໄດ້ອາໄສຢູ່.
[28]ອີຊາກໄດ້ດໍາລົງຊີວິດອີກຕໍ່ໄປຈົນເຖິງ 180 ປີ.[29]ອີຊາກໄດ້ສິ້ນລົມຫາຍໃຈ ແລະໄດ້ຕາຍໄປ,
ແລະໄດ້ຖືກຮວບຮວມໄວ້ກັບບັນພະບູຣຸດທັງຫລາຍຂອງເຂົ, າເປັນຜູ້ຊາຍທີ່ມີອາຍຸສູງຫລາຍ, ເອຊາວ ແລະຢາໂຄບ, ລູກຊາຍຂອງເພິ່ນເອງ, ໄດ້
ຝັງສົບເພິ່ນໄວ້.

36 [1]ຄົນເຫລົ່ານີ້ຄືເຊື້ອສາຍຂອງເອຊາວ ຫລືມີຊື່ຫນຶ່ງອີກວ່າເອໂດມດ້ວຍ.[2]ເອຊາວໄດ້ຮັບເອົາຊາວການາອານ.
ມາເປັນເມຍຂອງເຂົາຫລາຍຄົນ ຄົນເຫລົ່ານີ້ທີ່ເປັນເມຍຂອງເຂົາຄື: ນາງອາດາລູກສາວຂອງເອໂລນຊາວຮິດຕີ; ນາງໂອໂຮລີບາມາ
ລູກສາວຂອງອານາ, ຫລານສາວຂອງຊີເບໂອນຊາວຮີວີ;[3]ແລະນາງບາເສມາດ, ລູກສາວຂອງອິຊະມາເອນ, ນ້ອງສາວຂອງເນບາໂຢດ.

[4]ອາດາມີລູກຊາຍເອລີຟັດແກ່ເອຊາວ, ແລະບາເສມາດເກີດລູກຊາຍເຣອູເອນ.[5]ໂອໂຮລີບາມາເກີດລູກຊາຍ: ເຢອຸດ, ຢາລາມ, ແລະໂກຣາ.
ຄົນເຫລົ່ານີ້ເປັນລູກຊາຍຂອງເອຊາວ ຜູ້ຊຶ່ງໄດ້ເກີດແກ່ເຂົາໃນແຜ່ນດິນການາອານ.
[6]ເອຊາວໄດ້ນຳເອົາບັນດາເມຍຂອງຕົນ, ບັນດາລູກຊາຍຂອງເຂົາລູກສາວຂອງເຂົາ, ແລະຊະມາຊິກຄົວເຮືອນທັງຫມົດຂອງເຂົາ, ຝູງ
ສັດລຽ້ງທັງຫມົດຂອງເຂົາ, ແລະສິ່ງຂອງທັງຫມົດທີ່ເຂົາຄອບຄອງເປັນເຈົ້າຂອງຊຶ່ງເຂົາໄດ້ຊອກຫາຮວບຮວມມາໄດ້ໃນແຜ່ນດິນການາອານ,
ແລະໄດ້ເຂົ້າໄປໃນແຜ່ນດິນຫ່າງໄກຈາກຢາໂຄບນ້ອງຊາຍຂອງຕົນ.[7]ເຂົາໄດ້ເຮັດຢ່າງນີ້ ເພາະວ່າຊັບສິນຂອງພວກເຂົາມີຫລວງຫລາຍ
ເກີນກວ່າທີ່ພວກເຂົາຈະຢູ່ດ້ວຍກັນໄດ້. ທີ່ດິນທີ່ພວກເຂົາອາໄສຢູ່ບໍ່ສາມາດຮອງຮັບພວກເຂົາໄດ້ເພາະຝູງສັດລຽ້ງຂອງພວກເຂົາ.[8]ສະນັ້ນ
ເອຊາວ, ຊຶ່ງເປັນທີ່ຮູ້ຈັກວ່າເອໂດມ, ຈຶ່ງໄປຕັ້ງຖິ່ນຖານຢູ່ໃນເຂດເນີນພູເສອີ.
[9]ຄົນເຫລົ່ານີ້ຄືບັນດາເຊື້ອສາຍຂອງເອຊາວ, ບັນພະບູຣຸດຂອງຊາວເອໂດມ ໃນດິນແດນທີ່ເນີນພູເສອີ.[10]ເຫລົ່ານີ້ຄືບັນດາຊື່ຂອງລູກຊາຍຂອງ
ເອຊາວ: ເອລີຟັດ, ລູກຊາຍຂອງອາດາເມຍຂອງເອຊາວ; ເຣອູເອນລູກຊາຍຂອງບາເສມາດ, ເມຍຂອງເອຊາວ.[11]ລູກຊາຍຂອງເອລີຟັດຄື:
ເຕມານ, ໂອມາກ, ເຊໂຟ, ຄາຕາມ, ແລເກນາດ.[12]ຕິມນາ, ເມຍນ້ອຍຄົນຫນຶ່ງຂອງເອລີຟັດ, ລູກຊາຍຂອງເອຊາວ,
ໄດ້ມີລູກຊາຍຜູ້ຫນຶ່ງຊື່ອາມາເຫລັກ. ຄົນເຫລົ່ານີ້ຄືຫລານຊາຍຂອງອາດານ, ເມຍຂອງເອຊາວ.
[13]ຄົນເຫລົ່ານີ້ຄືລູກຊາຍທັງຫລາຍຂອງ ເຣອູເອນຄື: ນາຮາດ, ເຊຣາ, ຊາມມາ, ແລະມິດຊາ. ຄົນເຫລົ່ານີ້ເປັນຫລານຊາຍຂອງບາເສມາດ,
ເມຍຂອງເອຊາວ.[14]ຄົນເຫລົ່ານີ້ເປັນລູກຊາຍຂອງນາງໂອໂຮລີບາມາ, ເມຍຂອງເອຊາວ, ຜູ້ຊຶ່ງເປັນລູກສາວຂອງອານາ ແລະເປັນຫລານສາວ
ຂອງຊີເບໂອນ. ນາງໄດ້ເກີດ: ເຢອຸດ, ຢາລາມ, ແລະໂກຣາແກ່ເອຊາວ.
[15]ຄົນເຫລົ່ານີ້ເປັນວົງຕະກູນທັງຫລາຍທ່າມກາງເຊື້ອສາຍມາຈາກເອຊາວ. ເຊື້ອສາຍຂອງ ເອລີຟັດ, ລູກຊາຍກົກຂອງເອຊາວ: ເຕມານ, ໂອມາກ,
ເຊໂຟ, ເກນາດ,[16]ໂກຣາ, ຄາຕາມ, ແລະອາມາເຫລັກ. ຄົນເຫລົ່ານີ້ເປັນວົງຕະກູນສືບເຊື້ອສາຍຈາກເອລີຟັດໃນແຜ່ນດິນຂອງເອໂດມ.
ພວກເຂົາເປັນຫລານຊາຍຂອງອາດາ.
[17]ຄົນເຫລົ່ານີ້ເປັນວົງຕະກູນຈາກເຣອູເອນ, ລູກຊາຍຂອງເອຊາວຄື: ນາຮາດ, ເຊຣາ, ຊາມມາ, ແລະມິດຊາ. ຄົນເຫລົ່ານີ້ເປັນວົງຕະກູນສືບ
ເຊື້ອສາຍມາຈາກເຣອູເອນໃນແຜ່ນດິນແຫ່ງເອໂດມ. ພວກເຂົາເປັນຫລາຍຊາຍຂອງບາເສມາດ, ເມຍຂອງເອຊາວ.
[18]ຄົນເຫລົ່ານີ້ເປັນວົງຕະກູນຂອງນາງໂອໂຮລີບາມາ, ເມຍຂອງເອຊາວ ຄື: ເຢອຸດ, ຢາລາມ, ແລະໂກຣາ.
ຄົນເຫລົ່ານີ້ສືບເຊື້ອສາຍຈາກນາງໂອໂຮລີບາມາ, ລູກສາວຂອງອານານ.[19]ຄົນເຫລົ່ານີ້ຄືລູກຊາຍທັງຫມົດຂອງເອຊາວ,
ແລະເປັນວົງຕະກູນຂອງພວກເຂົາ.
[20]ຄົນເຫລົ່ານີ້ເປັນລູກຊາຍທັງຫລາຍຂອງເສອີຊາວໂຮຣີ, ຜູ້ທີ່ອາໄສຂອງແຜ່ນດິນນັ້ນຄື: ໂລຕັນ, ໂຊບານ, ຊີເບໂອນ, ອານາ,[21]ດີໂຊນ, ເອເຊ,
ແລະດີຊານ. ຄົນເຫລົ່ານີ້ເປັນວົງຕະກູນຂອງຄົນໂຮຣີ, ຜູ້ຢູ່ອາໄສຂອງເສອີໃນແຜ່ນດິນເອໂດມ.[22]ລູກຊາຍທັງຫລາຍຂອງ ໂລຕັນຄື: ໂຮຣີ ແລະ
ໂຮມາມ, ແລະຕິມນາ ນ້ອງສາວຂອງໂລຕັນ.
[23]ຄົນເຫລົ່ານີ້ເປັນລູກຊາຍຂອງໂຊບານຄື: ອັນວານ, ມານາຮາດ, ເອບານ, ເຊໂຟ, ແລະໂອນາມ.[24]ຄົນເຫລົ່ານີ້ເປັນລູກຊາຍຂອງຊີເບໂອນຄື:
ອາອີຢາ ແລະອານາ. ນີ້ຄືອານາຜູ້ທີ່ພົບບໍ່ນ້ຳຮ້ອນໃນຖິ່ນແຫ້ງແລ້ງກັນດານ, ໃນເວລາທີ່ເຂົາກຳລັງລ້ຽງຝູງລໍຂອງຊີເບໂອນພໍ່ຂອງຕົນ.
[25]ຄົນເຫລົ່ານີ້ເປັນລູກຂອງອານາ: ຄືດີໂຊນ ແລະໂອໂຮລີບານາ, ລູກສາວຂອງອານາ.[26]ຄົນເຫລົ່ານີ້ເປູ້ກຊາຍຂອງດີໂຊນຄື:ເຮັມດານ,
ເອັດຊະບານ, ອິທະຣານ, ແລະເກຣານ.[27]ຄົນເຫລົ່ານີ້ເປັນລູກຊາຍຂອງເອເຊຄື: ຊາອາວານ, ແລະອາການ.
[28]ຄົນເຫລົ່ານີ້ເປັນລູກຊາຍທັງຫລາຍຂອງດີຊານຄື: ອູເຊ ແລະອາຣານ.
[29]ຄົນເຫລົ່ານີ້ເປັນວົງຕະກູນຂອງຄົນໂຮຣີ ຄື: ໂລຕັນ, ໂຊບານ, ຊີເບໂອນ, ອານາ,[30]ດີໂຊນ, ເອເຊ, ແລະດີຊານ.
ຄົນເຫລົ່ານີ້ເປັນວົງຕະກູນຂອງຄົນໂຮຣີ, ຕາມບັນຊີວົງຕະກູນຂອງພວກເຂົາໃນແຜ່ນດິນເສອີ.
[31]ຄົນເຫລົ່ານີ້ເປັນກະສັດ ແລະຫລານສາວຂອງເມຊາຮາບຜູ້ທີ່ປົກຄອງແຜ່ນດິນເອໂດມກ່ອນກະສັດໃດໆຈະມາປົກຄອງເຫນືອຄົນອິສະຣາເອນ:
[32]ເຈົ້າເບລາ, ລູກຊາຍຂອງເບອໍ, ໄດ້ປົກຄອງເອໂດມ, ແລະຊື່ເມືອງຂອງເຂົາຄືດິນຮາບາ.[33]ເມື່ອເບລາເສຍຊີວິດ, ຈາກນັ້ນໂຢບັບ, ລູກຊາຍຂອງ
ເຊຣາ, ແຫ່ງເມືອງໂບຊະຣາໄດ້ປົກຄອງແທນເຂົາ.
[34]ເມື່ອໂຢບັບເສຍຊີວິດ, ຮູຊາມຄົນຂອງແຜ່ນດິນເຕມານ, ໄດ້ຂຶ້ນມາປົກຄອງແທນເຂົາ.[35]ເມື່ອຮູຊາມໄດ້ເສຍຊີວິດ, ຮາດັດ, ລູກຊາຍຂອງເບດັດ,
ຜູ້ຮົບຊະນະຊາວມີດີອານໃນແຜ່ນຂອງດິນແດນໂມອາບ, ໄດ້ປົກຄອງແທນເຂົາຊື່ເມືອງຂອງເຂົາອາວີ.[36]ເມື່ອຮາດັດເສຍຊີວິດ, ຈາກນັ້ນສາມລາ,
ແຫ່ງເມືອງມາສະເຣກາໄດ້ປົກຄອງແທນເຂົາ.
[37]ເມື່ອສາມລາເສຍຊີວິດ, ຈາກນັ້ນຊາອູນ ແຫ່ງເມືອງເຣໂຮໂບດທີ່ຢູ່ແຄມແມ່ນ້ຳໄດ້ປົກຄອງແທນເຂົາ.[38]ເມື່ອຊາອູນເສຍຊີວິດ,
ຈາກນັ້ນບາອັນຮານາ ລູກຊາຍຂອງອັກໂບຣາດັດ ໄດ້ປົກຄອງແທນເຂົາ.[39]ເມື່ອບາອັນຮານາລູກຊາຍຂອງອັກໂບຣາດັດເສຍຊີວິດ,
ຈາກນັ້ນຮາດານໄດ້ປົກຄອງແທນເຂົາ ຊື່ເມືອງຂອງເຂົາຄື ປາອູ. ເມຍຂອງເຂົາຊື່ວ່າເມເຮຕາເບນ, ລູກສາວຂອງມັດເຣັດ ແລະຫລານສາວຂອງ
ເມຊາຮາບ.
[40]ເຫລົ່ານີ້ຄືຊື່ຂອງພວກຫົວຫນ້າຕະກູນຈາກບັນດາເຊື້ອສາຍ ຂອງເອຊາວຕາມວົງຕະກູນຂອງພວກເຂົາ ແລະຖິ່ນຖານຂອງພວກເຂົາ,
ໂດຍຊື່ຂອງພວກເຂົາຄື: ຕິມນາ, ອານວາ, ເຢເທັດ,[41]ໂອໂຮລີບາມາ, ເອລາ, ປີໂນນ,[42]ເກນັດ, ເຕມານ, ມິບຊາ,[43]ມັກດີເອນ, ແລະອີຣາມ.
ຄົນເຫລົ່ານີ້ເປັນຫົວຫນ້າວົງຕະກູນຂອງເອໂດມ, ຕາມການຕັ້ງຖິ່ນຖານຂອງພວກເຂົາໃນດິນແດນທີ່ພວກເຂົາໄດ້ຄອບຄອງ. ນີ້ຄື ເອຊາວ,
ບັນພະບຸຣຸດຂອງເອໂດມ.

 generated on Tue Jun 17 19:01:42 2025

37 1ຢາໂຄບໄດ້ອາໄສຢູ່ໃນແຜ່ນດິນທີ່ພໍ່ຂອງຕົນເຄີຍອາໄສຢູ່, ໃນແຜ່ນດິນການາອານ.2ປະຫວັດກ່ຽວຂ້ອງກັບຢາໂຄບ. ໂຢເຊັບ,
ເປັນຊາຍຫນຸ່ມອາຍຸ 17 ປີ, ເປັນຜູ້ດູແລຝູງສັດກັບອ້າຍຂອງເຂົາ. ເຂົາຢູ່ກັບພວກລູກຊາຍຂອງນາງບິນຮາ ແລະລູກຊາຍຂອງນາງ
ຊີລະປາ,ຜູ້ເປັນເມຍນ້ອຍຂອງພໍ່ຕົນ. ໂຢເຊັບໄດ້ນໍາສິ່ງທີ່ບໍ່ດີກ່ຽວກັບພວກເຂົາມາບອກໃຫ້ພໍ່ຂອງພວກເຂົາຟັງ.

3ອິສະຣາເອນຈຶ່ງໄດ້ຮັກໂຢເຊັບຫລາຍກວ່າລູກຊາຍທັງຫມົດຂອງເຂົາ ເພາະວ່າເຂົາເປັນລູຊາຍທີ່ເກີດມາໃນເວລາທີ່ເພິ່ນແກ່ຕົວແລ້ວ. ເພິ່ນໄດ້
ຕັດເສື້ອຜ້າທີ່ສວຍງາມໃຫ້ເຂົາ.4ເມື່ອພວກອ້າຍຂອງເຂົາໄດ້ເຫັນວ່າ ພໍ່ຂອງພວກຕົນຮັກເຂົາຫລາຍກວ່າຮັກພວກຕົນ. ພວກເຂົາກຽດຊັງເຂົາ
ຫລາຍ ແລະບໍ່ເວົ້າຢ່າງຈິງໃຈຕໍ່ເຂົາ.
5ໂຢເຊັບໄດ້ຝັນ, ແລະເຂົາໄດ້ເລົ່າຄວາມຝັນນັ້ນສູ່ພວກອ້າຍຂອງເຂົາ. ພວກເຂົາແຮງກຽດຊັງເຂົາຫລາຍຂຶ້ນ.6ເຂົາໄດ້ເວົ້າກັບພວກເຂົາວ່າ,
"ຂໍຟັງຄວາມຝັນທີ່ຂ້ອຍໄດ້ຝັນ.
7ເບິ່ງແມ, ພວກເຮົາກໍາລັງມັດຟ່ອນເຂົ້າຢູ່ທີ່ທົ່ງນາ ເມື່ອມັດແລ້ວ, ຟ່ອນເຂົ້າຂອງຂ້ອຍໄດ້ຕັ້ງຂຶ້ນແລະຢືນຢູ່, ແລະສ່ວນຟ່ອນເຂົ້າຂອງພວກເຈົ້າໄດ້
ເຂົ້າມາລ້ອມຮອບ, ແລະໄດ້ໂຄ້ງຄໍານັບໃຫ້ກັບຟ່ອນເຂົ້າຂອງຂ້ອຍ."8ພວກອ້າຍໄດ້ເວົ້າກັບເຂົາວ່າ, "ເຈົ້າຈະປົກຄອງເຫນືອພວກເຮົາຈິງໆບໍ?
ເຈົ້າຈະປົກຄອງ ເຫນືອພວກເຮົາຈິງໆບໍ?" ພວກອ້າຍຈຶ່ງກຽດຊັງເຂົາຫລາຍຍິ່ງຂຶ້ນ ເພາະຄວາມຝັນຂອງເຂົາແລະຄໍາເວົ້າຂອງເຂົາ.
9ເຂົາໄດ້ຝັນອີກຄັ້ງ ແລະເລົ່າຄວາມຝັນສູ່ພວກອ້າຍ. ເຂົາເວົ້າວ່າ, "ຂ້ອຍໄດ້ຝັນອີກເລື່ອງຫນຶ່ງ. ຄື: ດວງຕາເວັນ, ເດືອນ, ແລະດວງດາວສິບເອັດ
ດວງໄດ້ກົ້ມຄໍານັບຂ້ອຍ."10ເຂົາໄດ້ເລົ່າເລື່ອງນີ້ແກ່ພໍ່ຂອງເຂົາເຫມືອນທີ່ໄດ້ເລົ່າກັບພວກອ້າຍຂອງເຂົາ, ແລະພໍ່ຂອງເຂົາໄດ້ຕໍານິເຂົາ.
ໄດ້ເວົ້າກັບເຂົາວ່າ,"ຄວາມຝັນທີ່ເຈົ້າໄດ້ຝັນຄືຫຍັງ? ແມ່ຂອງເຈົ້າ ແລະເຮົາ ແລະພວກອ້າຍຂອງເຈົ້າຈະເຂົ້າມາເພື່ອກົ້ມຄໍານັບເຈົ້າ
ຊັ້ນບໍ?"11ພວກອ້າຍຂອງເຂົາອິດສາເຂົາ, ແຕ່ພໍ່ຂອງເຂົາໄດ້ເກັບເລື່ອງນີ້ໄວ້ໃນໃຈ.
12ພວກອ້າຍຂອງເຂົາໄດ້ໄປລ້ຽງສັດຂອງພໍ່ທີ່ຊີເຄມ.13ອິສະຣາເອນໄດ້ເວົ້າກັບໂຢເຊັບວ່າ, "ພວກອ້າຍຂອງເຈົ້າກໍາລັງໄປລ້ຽງສັດຢູ່ຊີເຄມ ເຈົ້າໄປ
ຫາພວກອ້າຍຂອງເຈົ້າ ທີ່ກໍາລັງລ້ຽງສັດຢູ່ທີ່ຊີເຄມບໍ່ແມ່ນບໍ? ມານີ້ເທາະ, ແລະເຮົາຈະສົ່ງເຈົ້າໄປຫາພວກເຂົາ." ໂຢເຊັບໄດ້ຕອບເພິ່ນວ່າ, "ລູກ
ພ້ອມທີ່ຈະໄປ."14ອິສະຣາເອນໄດ້ເວົ້າກັບເຂົາວ່າ,"ຈົ່ງໄປດຽວນີ້, ໄປເບິ່ງດູວ່າພວກອ້າຍຂອງເຈົ້າກັບພວກຝູງສັດຢູ່ດີກັນບໍ່? ແລ້ວກັບມາບອກ
ເຮົາ." ສະນັ້ນຢາໂຄບຈຶ່ງໄດ້ສົ່ງເຂົາອອກໄປຈາກຮ່ອມພູເຮັບໂຣນ, ແລະໂຢເຊບກໍໄດ້ໄປຍັງຊີເຄມ.
15ມີຊາຍຄົນຫນຶ່ງໄດ້ພົບໂຢເຊບ. ເບິ່ງເຖີດ, ໂຢເຊບກໍາລັງເດີນໄປມາໃນທົ່ງນາ, ແລະຜູ້ຊາຍຄົນນັ້ນໄດ້ຖາມເຂົາວ່າ,"ເຈົ້າຊອກຫາ
ໃຜ?"16ໂຢເຊັບໄດ້ຕອບວ່າ,"ຂ້ອຍຊອກຫາພວກອ້າຍຂອງຂ້ອຍ. ກະລຸນາ, ບອກຂ້ອຍແດ່ໄດ້ບໍ່ວ່າພວກເຂົາກໍາລັງລ້ຽງຝູງສັດຢູ່ໃສ?"17ຊາຍຄົນ
ນັ້ນໄດ້ຕອບວ່າ,"ພວກເຂົາຫາກໍໄປຈາກທີ່ນີ້, ຂ້ອຍໄດ້ຍິນພວກເຂົາເວົ້າກັນວ່າ, ໃຫ້ພວກເຮົາໄປຍັງເມືອງໂດທານກັນເທາະ."" ໂຢເຊັບໄດ້ໄປ
ຕາມຫາພວກອ້າຍຂອງເຂົາ ແລະໄດ້ພົບພວກເຂົາຢູ່ທີ່ເມືອງໂດທານ.
18ພວກອ້າຍຫລຽວເຫັນເຂົາມາແຕ່ໄກ, ແລະກ່ອນທີ່ເຂົາຈະເຂົ້າມາໃກ້ພວກເຂົາ, ພວກເຂົາຈຶ່ງວາງແຜນເພື່ອທີ່ຈະຂ້າເຂົາ.19ພວກອ້າຍຂອງເຂົາ
ໄດ້ເວົ້າກັນວ່າ, "ເບິ່ງແມ, ເຈົ້າຄົນຊ່າງຝັນກໍາລັງມາ.20ມາດຽວນີ້, ໃຫ້ພວກເຮົາຂ້າເຂົາ, ແລະຖິ້ມເຂົາໄວ້ທີ່ບໍ່ເຫລົ່ານີ້ຈັກບໍ່ຫນຶ່ງ. ພວກເຮົາຈະ
ເວົ້າວ່າສັດຮ້າຍໄດ້ກັດກິນເຂົາ. ເຮົາຈະໄດ້ເຫັນວ່າ ຄວາມຝັນຂອງເຂົາຈະເປັນຢ່າງໃດ."
21ເມື່ອຣູເບັນໄດ້ຍິນພວກເຂົາເວົ້າດັ່ງນັ້ນ ກໍຊອກຫາວິທີຊ່ວຍໂຢເຊັບ. ລາວໄດ້ເວົ້າວ່າ, "ຢ່າໃຫ້ເຮົາເອົາຊີວິດຂອງລາວ
ເທາະ."22ຣູເບັນໄດ້ເວົ້າກັບພວກເຂົາວ່າ, "ຢ່າໃຫ້ເລືອດໄຫລເລີຍ. ໂຍນເຂົາລົງໃນບໍ່ ທີ່ຖິ່ນແຫ້ງແລ້ງກັນດານນີ້ກໍພໍ, ແຕ່ຢ່າລົງມືຂ້າເຂົາເລີຍ
ນັ້ນຄືລາວຈະຊ່ວຍໂຢເຊັບໃຫ້ພົ້ນຈາກເງື້ອມມືຂອງພວກເຂົາ ເພື່ອທີ່ຈະນໍາເຂົາກັບໄປຫາພໍ່ຂອງເຂົາ.
23ເມື່ອໂຢເຊັບມາເຖິງພວກອ້າຍຂອງເຂົາ, ພວກເຂົາໄດ້ຈັບເຂົາແກ້ເສື້ອຜ້າທີ່ລາວນຸ່ງມາອອກ.24ແລ້ວພວກເຂົາກໍຈັບລາວໂຍນຖິ້ມລົງໃນບໍ່
ບໍ່ນັ້ນບໍ່ມີນ້ໍາ.
25ພວກເຂົາໄດ້ນັ່ງລົງເພື່ອຈະກິນອາຫານ. ພວກເຂົາກໍໄດ້ເຫັນ, ແລະມີຄາລະວານຂອງພວກອິຊະມາເອນກໍາລັງເດີນທາງມາຈາກເມືອງກີເລອາດ,
ພ້ອມກັບຝູງອູດຂອງພວກເຂົາບັນທຸກເຄື່ອງເທດ ແລະນ້ໍາມັນພຶດທີ່ມີກິ່ນຫອມ ແລະຢາງໄມ້ຫອມ. ພວກເຂົາກໍາລັງເດີນທາງບັນທຸກສິນຄ້າລົງໄປ
ອີຢິບ.26ຢູດາໄດ້ເວົ້າກັບພວກອ້າຍນ້ອງຂອງຕົນວ່າ,"ຈະມີປະໂຫຍດອັນໃດ ຖ້າເຮົາຈະຂ້ານ້ອງຊາຍຂອງເຮົາ ແລະປົກປິດເລືອດຂອງເຂົາ?
27ມາເທາະໃຫ້ເຮົາຂາຍເຂົາໃຫ້ພວກອິຊະມາເອນສາ. ແລ້ວບໍ່ຕ້ອງທໍາຮ້າຍເຂົາ. ເພາະເຂົາຄືນ້ອງຂອງເຮົາເປັນເລືອດເນື້ອຂອງເຮົາ." ພວກອ້າຍ
ນ້ອງທັງຫລາຍຂອງເຂົາກໍໄດ້ຮັບຟັງເຂົາ.28ພໍ່ຄ້າຊາວມີດີອານໄດ້ຜ່ານມາ ພວກອ້າຍຂອງເຂົາ. ໄດ້ດຶງໂຢເຊັບຂຶ້ນມາ
ແລະຍົກເຂົາອອກມາຈາກບໍ່ນັ້ນ. ພວກເຂົາໄດ້ຂາຍໂຢເຊບໃຫ້ກັບຊາວອິຊະມາເອນເປັນເງິນຊາວຫລຽນ. ຊາວອິຊະມາເອນໄດ້ພາໂຢເຊັບໄປ
ຍັງອີຢິບ.
29ຣູເບັນໄດ້ກັບໄປທີ່ບໍ່ນັ້ນ, ແລະ, ເບິ່ງເຖີດ, ໂຢເຊັບບໍ່ໄດ້ຢູ່ໃນບໍ່ນັ້ນ. ເຂົາໄດ້ຈີກເສື້ອຜ້າຂອງເຂົາ.30ເຂົາໄດ້ກັບມາຫາພວກນ້ອງຂອງເຂົາ ແລະ
ໄດ້ເວົ້າວ່າ, "ເດັກນັ້ນບໍ່ໄດ້ຢູ່ທີ່ນັ້ນ! ແລະຂ້ອຍຈະເຮັດແນວໃດ?"
31ພວກເຂົາໄດ້ຂ້າແບ້ໂຕຫນຶ່ງ ແລະຈາກນັ້ນໄດ້ເອົາເສື້ອຜ້າຂອງໂຢເຊັບ ແລະຈຸ່ມໃສ່ໃນເລືອດນັ້ນ.32ແລ້ວພວກເຂົາໄດ້ນໍາມັນໄປໃຫ້
ພໍ່ຂອງພວກເຂົາ ແລະໄດ້ເວົ້າວ່າ, "ພວກເຮົາໄດ້ພົບສິ່ງນີ້ຂໍເບິ່ງດູວ່າມັນເປັນເສື້ອຜ້າ. ຂອງລູກຊາຍຂອງພໍ່ຫລືບໍ່."33ຢາໂຄບຈື່ໄດ້ ແລະເວົ້າວ່າ,
"ນີ້ເປັນເສື້ອຜ້າຂອງລູກຊາຍເຮົາ. ສັດຮ້າຍໄດ້ກັດກິນເຂົາແນ່ນອນ. ໂຢເຊັບໄດ້ຖືກສັດຮ້າຍຈີກເປັນຊິ້ນໆ."
34ຢາໂຄບໄດ້ຈີກເສື້ອຜ້າຂອງເຂົາ ແລະນຸ່ງເສື້ອຜ້າກະສອບເຂົ້າ. ເພິ່ນໄວ້ທຸກໃຫ້ລູກຊາຍຂອງຕົນເປັນເວລານານ.35ລູກຊາຍ ແລະລູກສາວ
ທັງຫມົດຂອງເພິ່ນໄດ້ລຸກຂຶ້ນມາປອບໃຈເພິ່ນ, ແຕ່ເພິ່ນປະຕິເສດທີ່ຈະຮັບການປອບໂຍນ. ເພິ່ນໄດ້ເວົ້າວ່າ, "ຂ້ອຍຈະ
ລົງໄປທີ່ຢູ່ຂອງຄົນຕາຍຮ້ອງໃຫ້ຄ້ໍາຄວນເຖິງລູກຊາຍຂອງຂ້ອຍ." ພໍ່ຂອງເຂົາໄດ້ຮ້ອງໃຫ້ເຖິງເຂົາ.36ຊາວມີດີອານໄດ້ຂາຍເຂົາໃນເອຢິບ
ໃຫ້ກັບໂປທີຟາ, ຂ້າຣາຊການຂອງຟາຣາໂອ, ທີ່ເປັນຫົວຫນ້າຣາຊອົງຄະລັກ.

 generated on Tue Jun 17 19:01:42 2025

38 [1]ແລ້ວນີ້ກໍໄດ້ເກີດຂຶ້ນໃນເວລານັ້ນ ຢູດາໄດ້ໄປຈາກພວກອ້າຍນ້ອງຂອງຕົນ, ແລະໄປຢູ່ກັບຄົນອະດຸນລຳຊື່ວ່າ ຮີຣາ.
[2]ເຂົາໄດ້ພົບລູກສາວຂອງຊາຍຊາວການາອານຊື່ຊູອາ. ເຂົາໄດ້ແຕ່ງງານກັບນາງ. ແລະໄດ້ຫລັບນອນກັບນາງ.

[3]ນາງໄດ້ຕັ້ງຄັນ ແລະ ເກີດລູກຊາຍ. ເຂົາໄດ້ຖືກຕັ້ງຊື່ວ່າເອຣະ.[4]ນາງໄດ້ຖືພາອີກ ແລະ ເກີດລູກຊາຍອີກຄົນຫນຶ່ງ. ນາງໄດ້ເອີ້ນຊື່ເຂົາວ່າ ໂອນານ.
[5]ນາງໄດ້ມີລູກຊາຍອີກຄົນຫນຶ່ງ ແລະ ເອີ້ນຊື່ເຂົາວ່າ ເຊລາ. ນາງໄດ້ເກີດເຂົາຢູ່ທີ່ອັກຊິບ.
[6]ຢູດາໄດ້ຫາເມຍຄົນຫນຶ່ງໃຫ້ແກ່ເອຣະ, ລູກຊາຍກົກຂອງເຂົາ. ນາງຊື່ ຕາມາ.[7]ເອຣະລູກຊາຍກົກຂອງຢູດາ, ເປັນຄົນຊົ່ວຮ້າຍ
ໃນສາຍພຣະເນດຂອງພຣະຢາເວ. ພຣະຢາເວຈຶ່ງເຮັດໃຫ້ລາວຕາຍ.
[8]ຢູດາໄດ້ເວົ້າກັບໂອນານວ່າ, "ຈົ່ງໄປຫລັບນອນກັບເມຍຂອງອ້າຍເຈົ້າ. ຈົ່ງເຮັດຫນ້າທີ່ນ້ອງຊາຍຂອງສາມີແກ່ນາງ, ແລະ ໃຫ້ນາງ
ເກີດລູກເພື່ອອ້າຍຂອງເຈົ້າ."[9]ໂອນານໄດ້ຮູ້ວ່າ ເດັກນັ້ນຈະບໍ່ແມ່ນລູກຂອງຕົນ. ເມື່ອໃດກໍຕາມທີ່ເຂົາໄດ້ຫລັບນອນກັບເອື້ອຍໃພ້ຂອງເຂົາ, ເຂົາໄດ້
ເຮັດໃຫ້ນ້ຳການຕົກດິນ ດັ່ງນັ້ນເຂົາຈຶ່ງບໍ່ມີລູກສຳລັບອ້າຍຂອງຕົນ.[10]ສິ່ງທີ່ເຂົາໄດ້ກະທຳເປັນສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ.
ພຣະຢາເວຈຶ່ງໄດ້ຊົງເຮັດໃຫ້ເຂົາຕາຍຄືກັນ.
[11]ຈາກນັ້ນຢູດາໄດ້ເວົ້າກັບຕາມາ, ລູກໃພ້ຂອງຕົນວ່າ,"ຈົ່ງຢູ່ຢ່າງແມ່ຫມ້າຍໃນບ້ານຂອງພໍ່ເຈົ້າ ຈົນກວ່າເຊລາ,ລູກຊາຍຂອງເຮົາຈະເຕີບໃຫຍ່."
ເພາະເພິ່ນໄດ້ກົວວ່າ, "ເຂົາຈະຕາຍຄືກັນກັບອ້າຍຂອງເຂົາດ້ວຍ." ສະນັ້ນ ຕາມາຈຶ່ງໄດ້ຈາກໄປ ແລະໄດ້ອາໄສຢູ່ໃນບ້ານນຳພໍ່ຂອງຕົນ.
[12]ຫລັງຈາກນັ້ນເປັນເວລານານ, ລູກສາວຂອງຊູອາເມຍຂອງຢູດາ,ກໍຕາຍໄປ. ຢູດາໄດ້ຮັບການປອບປະໂລມ
ແລະໄດ້ໄປຫາຄົນຕັດຂົນແກະຂອງເພິ່ນທີ່ຕິມນາ, ເພິ່ນ ແລະເພື່ອນຂອງເພິ່ນຄືຮີຣາຊາວອາດຸນລຳ.[13]ຕາມາໄດ້ຮັບຂ່າວວ່າ, "ເບິ່ງແມ, ພໍ່ປູ່ຂອງ
ເຈົ້າກຳລັງໄປຕິມນາ ເພື່ອຕັດຂົນແກະຂອງເຂົາ."[14]ນາງຈຶ່ງປ່ຽນຊຸດຍິງຫມ້າຍຂອງນາງ ແລະໄດ້ຫົ່ມຕົວນາງເອງດ້ວຍເອົາຜ້າຄຸມຫນ້າໄວ້.
ນາງໄປນັ່ງທີ່ປະຕູຂອງບ້ານເອນາອິມທີ່ຈະໄປເມືອງຕິມນາ. ເພາະນາງໄດ້ເຫັນວ່າເຊລາກໍໃຫຍ່ແລ້ວ ແຕ່ນາງຍັງບໍ່ໄດ້
ຖືກມອບໃຫ້ເປັນເມຍຂອງເຂົາເທື່ອ.
[15]ເມື່ອຢູດາໄດ້ເຫັນນາງ ເພິ່ນກໍຄິດວ່ານາງເປັນໂສເພນີ ເພາະວ່ານາງໄດ້ປິດບັງໃບຫນ້າຂອງນາງ.[16]ເພິ່ນໄດ້ເຂົ້າໄປຫານາງທີ່ແຄມທາງ ແລະ
ໄດ້ເວົ້າວ່າ,"ມາເຖີດ, ຂໍໃຫ້ເຮົາໄດ້ຫລັບນອນກັບເຈົ້າ" ເພາະເພິ່ນບໍ່ຮູ້ວ່ານາງເປັນລູກໃພ້ຂອງຕົນເອງ. ແລະນາງຖາມຄືນວ່າ, "ທ່ານຈະ
ຫລັບນອນກັບຂ້ອຍທ່ານຈະໃຫ້ອັນໃດແກ່ຂ້ອຍ?"
[17]ເຂົາໄດ້ຕອບວ່າ, "ເຮົາຈະສົ່ງແບ້ຫນຸ່ມຈາກຝູງມາໃຫ້ນ້ອງຫນຶ່ງໂຕ." ເຂົາໄດ້ກ່າວວ່າ, "ເຮົາຈະໃຫ້ອັນໃດເປັນ
ຫລັກປະກັນແກ່ເຈົ້າໄດ້?"[18]ນາງໄດ້ຕອບວ່າ, "ຂໍກາຂອງທ່ານທີ່ມີເຊືອກຫ້ອຍ, ແລະ ໄມ້ເທົ້າທີ່ຢູ່ໃນມືທ່ານເປັນຫລັກປະກັນ." ເພິ່ນໄດ້ໃຫ້ຂອງ
ເຫລົ່ານັ້ນແກ່ນາງ, ແລະ ໄດ້ຫລັບນອນກັບນາງ ແລະ ນາງກໍໄດ້ຖືພາກັບເພິ່ນ.
[19]ນາງໄດ້ລຸກຂຶ້ນ ແລະ ໄດ້ຈາກໄປ. ນາງໄດ້ເອົາຜ້າຄຸມຫນ້າອອກ ແລະ ສວມໃສ່ເສື້ອຜ້າຍິງຫມ້າຍຂອງນາງ.[20]ຢູດາໄດ້ສົ່ງ
ແບ້ຫນຸ່ມຈາກຝູງໄປກັບເພື່ອນຂອງເຂົາ ຊາວອາດຸນລຳ ເພື່ອທີ່ຈະຮັບຂອງປະກັນຄືນ ຈາກມືຂອງຜູ້ຍິງນັ້ນ, ແຕ່ເຂົາຫານາງບໍ່ພົບ.
[21]ແລ້ວຄົນອາດຸນລຳໄດ້ຖາມບັນດາຜູ້ຊາຍຂອງສະຖານທີ່ນັ້ນວ່າ, "ຍິງໂສເພນີທີ່ເຄີຍຢູ່ເອນາຣິມທີ່ແຄມທາງນີ້ຢູ່ໃສແລ້ວ?" ພວກເຂົາຕອບວ່າ,"
ບໍ່ເຄີຍມີໂສເພນີທີ່ນີ້."[22]ເຂົາກໍໄດ້ກັບໄປຫາຢູດາ ແລະໄດ້ເວົ້າວ່າ, "ຂ້ອຍຫານາງບໍ່ພົບ. ພວກຜູ້ຊາຍຂອງທີ່ນັ້ນເວົ້າວ່າບໍ່ເຄີຍມີ
ໂສເພນີທີ່ນີ້.""[23]ຢູດາໄດ້ເວົ້າວ່າ, "ໃຫ້ນາງເກັບສິ່ງຂອງຕ່າງໆໄວ້. ເພື່ອທີ່ເຮົາຈະບໍ່ຕ້ອງອັບອາຍ, ທີ່ຈິງເຮົາໄດ້ສົ່ງແບ້ຫນຸ່ມນີ້ໄປ, ແຕ່ເຈົ້າກໍຫານາງ
ບໍ່ພົບ."
[24]ຢູ່ຕໍ່ມາຫລັງຈາກນັ້ນ ປະມານສາມເດືອນໄດ້ມີຄົນມາບອກຢູດາວ່າ, "ທາມາລູກໃພ້ຂອງທ່ານໄດ້ເປັນໂສເພນີ, ແລະຈິງໆນາງໄດ້ຖື
ພາເພາະເຫດນັ້ນ." ຢູດາໄດ້ເວົ້າວ່າ, "ຈົ່ງນຳນາງມາທີ່ນີ້ ແລະ ເຜົານາງເສຍ."[25]ເມື່ອນາງໄດ້ຖືກນຳອອກ, ນາງຈຶ່ງສົ່ງຄົນໄປບອກກັບພໍ່ປູ່ນາງວ່າ,
"ຂ້ອຍຕັ້ງທ້ອງກັບຜູ້ຊາຍຊຶ່ງເປັນເຈົ້າຂອງສິ່ງເຫລົ່ານີ້." ນາງໄດ້ເວົ້າວ່າ, "ຂໍຈົ່ງພິຈາລະນາເຖີດ, ວ່າໃຜເປັນເຈົ້າຂອງສິ່ງເຫລົ່ານີ້ກາທີ່ມີເຊືອກ
ຫ້ອຍ ແລະໄມ້ເທົ້ານີ້ດູ.[26]ຢູດາຈື່ສິ່ງເຫລົ່ານີ້ໄດ້ ແລະ ເວົ້າວ່າ, "ນາງມີຄວາມຊອບທັມຫລາຍກວ່າເຮົາ, ຕັ້ງແຕ່ເຮົາບໍ່ໄດ້ຍົກ
ນາງໃຫ້ເປັນເມຍຂອງເຊຣາ, ລູກຊາຍຂອງເຮົາ." ແລະ ເພິ່ນບໍ່ໄດ້ຫລັບນອນກັບນາງອີກ.
[27]ຢູ່ມາເມື່ອເຖິງກຳນົດເກີດລູກ, ເບິ່ງເຖີດ, ມີລູກຝາແຝດຢູ່ໃນທ້ອງຂອງນາງ.[28]ເມື່ອເຖິງເວລາກຳນົດເກີດລູກຜູ້ຫນຶ່ງເອົາມືອອກມາ, ນາງ
ຜະດຸງຄັນໄດ້ເອົາດ້າຍສີແດງ ແລະໄດ້ຜູກທີ່ມືຂອງເຂົາແລະໄດ້ເວົ້າວ່າ, "ຄົນນີ້ໄດ້ອອກມາກ່ອນ."
[29]ແຕ່ເດັກນ້ອຍຫົດມືເຂົ້າຄືນ, ແລະ ນ້ອງຊາຍຂອງເຂົາອອກມາກ່ອນ. ແລ້ວນາງຜະດຸງຄັນກໍເວົ້າວ່າ, "ເຈົ້າໄດ້ແຫວກອອກມາໄດ້ຢ່າໃດ!"
ດັ່ງນັ້ນເຂົາຈຶ່ງໄດ້ຖືກເອີ້ນຊື່ວ່າເປເຣັດ.[30]ຈາກນັ້ນອ້າຍຂອງເຂົາ, ຈຶ່ງໄດ້ອອກມາ ຄືຄົນທີ່ມີດ້າຍສີແດງຜູກຕິດມື, ແລະ ເຂົາໄດ້ຖືກເອີ້ນຊື່ວ່າ
ເຊຣາ.

39 [1]ໂຢເຊັບໄດ້ຖືກນຳລົງໄປຍັງອີຢິບໂປຕີຟາ, ຄົນອີຢິບ ຜູ້ບັນຊາການອົງຄະລັກຂອງກະສັດຟາໂຣ,
ໄດ້ຊື້ເຂົາຈາກຄົນອິຊະມາເອນຜູ້ທີ່ໄດ້ນຳເຂົາລົງມາທີ່ນີ້.[2]ພຣະຢາເວໄດ້ສະຖິດຢູ່ກັບໂຢເຊັບ ແລະເຂົາໄດ້ກາຍເປັນຜູ້ຊາຍທີ່
ປະສົບຄວາມສຳເລັດ. ລາວໄດ້ອາໄສຢູ່ໃນເຮືອນຂອງເຈົ້ານາຍຄົນອີຢິບຂອງເຂົາ.

[3]ເຈົ້ານາຍຂອງເຂົາໄດ້ເຫັນວ່າພຣະຢາເວໄດ້ສະຖິດກັບເຂົາ ແລະພຣະຢາເວໄດ້ຊົງກະທຳໃຫ້ທຸກສິ່ງທີ່ລາວໄດ້ເຮັດປະສົບຄວາມສຳເລັດ.
[4]ໂຢເຊັບໄດ້ເປັນທີ່ຊອບໃນສາຍຕາຂອງເຂົາ. ລາວໄດ້ຮັບໃຊ້ໂປຕີຟາ. ໂປຕີຟາໄດ້ ໃຫ້ໂຢເຊັບຈັດການເບິ່ງແຍງບ້ານຂອງເຂົາ, ແລະ
ທຸກສິ່ງທີ່ເຂົາເປັນເຈົ້າຂອງ, ເຂົາໄດ້ໃຫ້ໂຢເຊັບເບິ່ງແຍງທຸກສິ່ງ.
[5]ຢູ່ມາຫລັງຈາກທີ່ເຂົາໃຫ້ໂຢເຊັບຈັດການເບິ່ງແຍງບ້ານຂອງເຂົາ ແລະທຸກສິ່ງທີ່ເຂົາເປັນເຈົ້າຂອງ, ທີ່ພຣະຢາເວໄດ້ອວຍພອນບ້ານຂອງຄົນອີຢິບ
ນັ້ນເພາະເຫັນແກ່ໂຢເຊັບ. ພຣະພອນຂອງພຣະຢາເວມີຢູ່ໃນທຸກສິ່ງທີ່ໂປຕີຟາມີໃນເຮືອນແລະໃນທົ່ງນາ.[6]ໂປຕີຟາໄດ້ໃຫ້ທຸກສິ່ງທີ່ເຂົາມີໃຫ້
ຢູ່ພາຍໃຕ້ການດູແລຂອງໂຢເຊັບ. ເຂົາບໍ່ຕ້ອງຄິດອັນໃດນອກຈາກອາຫານທີ່ເຂົາຈະກິນ. ໂຢເຊັບເປັນຊາຍຫນຸ່ມທີ່ຮູບຫລໍ່ ແລະມີສະເຫນ່.
[7]ຫລັງຈາກນັ້ນເມຍຂອງເຈົ້ານາຍຂອງເຂົາໄດ້ມີຄວາມປາຖະຫນາໃນໂຢເຊັບ. ນາງໄດ້ເວົ້າວ່າ, "ມາຫລັບນອນກັບຂ້ອຍ."[8]ແຕ່ເຂົາໄດ້ປະຕິເສດ
ແລະໄດ້ເວົ້າກັບເມຍຂອງເຈົ້ານາຍຂອງເຂົາວ່າ, "ເບິ່ງດູ, ເຈົ້ານາຍຂອງຂ້ອຍບໍ່ໄດ້ສົນໃຈວ່າຂ້ານ້ອຍຈະເຮັດຫຍັງຢູ່ໃນບ້ານນີ້, ແລະ
ເພິ່ນໄດ້ມອບທຸກສິ່ງທີ່ເພິ່ນເປັນເຈົ້າຂອງ ໃຫ້ຢູ່ພາຍໃຕ້ການດູແລຂອງຂ້ານ້ອຍ.[9]ບໍ່ມີໃຜໃນບ້ານນີ້ທີ່ໃຫຍ່ໄປກວ່າຂ້ານ້ອຍ.
ເພິ່ນບໍ່ໄດ້ຫວງອັນໃດໄວ້ຈາກຂ້ານ້ອຍ ເວັ້ນໄວ້ແຕ່ຍານາງເພາະທ່ານເປັນເມຍຂອງເພິ່ນ, ຂ້ານອຍຈະເຮັດສິ່ງທີ່ຊົ່ວຮ້າຍທີ່ໃຫຍ່ຫລວງນີ້ ແລະ
ເຮັດບາບຕໍ່ພຣະເຈົ້າໄດ້ຢ່າງໃດ?"
[10]ນາງໄດ້ເວົ້າກັບໂຢເຊັບທຸກມື້ທຸກວັນ, ແຕ່ເຂົາປະຕິເສດທີ່ຈະຫລັບນອນນກັບນາງ ຫລືຢູ່ກັບນາງ.[11]ຢູ່ມາມື້ຫນຶ່ງ ເມື່ອເຂົາໄດ້ເຂົ້າໄປໃນ
ບ້ານເພື່ອທີ່ຈະທຳງານຂອງເຂົາ. ບໍ່ມີຄົນຮັບໃຊ້ຈັກຄົນຢູ່ໃນເຮືອນນັ້ນ.[12]ນາງໄດ້ຈັບຕົວເຂົາຈ່ອງເສື້ອເຂົາໄວ້ ແລະເວົ້າວ່າ, "ຈົ່ງຫລັບນອນນຳ
ຂ້ອຍສາ." ແຕ່ເຂົາໄດ້ປະເສື້ອຜ້າຂອງເຂົາໄວ້ໃນມືຂອງນາງ,ຫນີແລ່ນອອກໄປຂ້າງນອກ.
[13]ເມື່ອນາງເຫັນໂຢເຊັບປະເສື້ອໄວ້ ແລະໄດ້ຫນີອອກໄປຂ້າງນອກ,[14]ນາງຈຶ່ງຮ້ອງພວກຜູ້ຊາຍໃນບ້ານນາງ ແລະໄດ້ບອກພວກເຂົາວ່າ, "ເບິ່ງແມ,
ໂປຕີຟາໄດ້ນຳ ຄົນເຮັບເຣີນີ້ມາເພື່ອຈະລ່ວງເກີນຕໍ່ເຮົາ. ເຂົາໄດ້ເຂົ້າມາຫາເຮົາເພື່ອທີ່ຈະຫລັບນອນກັບເຮົາ, ແລະເຮົາໄດ້ຮ້ອງຂຶ້ນ.[15]ເມື່ອ
ເຂົາໄດ້ຍິນເຮົາຮ້ອງເຂົາຈຶ່ງໄດ້ປະເສື້ອຜ້າຂອງເຂົາໄວ້ກັບເຮົາ,ແລະແລ່ນຫນີໄປຂ້າງນອກ."
[16]ນາງໄດ້ວາງເສື້ອຜ້າຂອງເຂົາໄວ້ຂ້າງໆນາງ ຈົນຜູ້ເປັນນາຍຂອງເຂົາໄດ້ເຂົ້າບ້ານມາ.[17]ນາງໄດ້ບອກເຂົາຢ່າງນີ້ວ່າ, "ຄົນຮັບໃຊ້ເຮັບເຣີຜູ້ທີ່
ທ່ານໄດ້ນຳມາໃຫ້ເຮົາ ເຂົາໄດ້ເຂົ້າມາເພື່ອຈະທຳຫຍາບຄາຍຕໍ່ຂ້ອຍ.[18]ແລ້ວນີ້ກໍໄດ້ເກີດຂຶ້ນເມື່ອຂ້ອຍຮ້ອງຂຶ້ນ, ເຂົາໄດ້ປະເສື້ອຜ້າຂອງເຂົາໄວ້ທີ່
ນີ້ແລະຫນີອອກໄປຂ້າງນອກ."
[19]ແລ້ວເມື່ອເຈົ້ານາຍຂອງເຂົາໄດ້ຍິນເລື່ອງເລົ່າ, ທີ່ເມຍຂອງເພິ່ນບອກເພິ່ນ ນີ້ຄືສິ່ງທີ່ຄົນຮັບໃຊ້ຂອງທ່ານໄດ້ກະທຳຕໍ່ຂ້ອຍ ເພິ່ນໃຈຮ້າຍຫລາຍ.
[20]ເຈົ້ານາຍຂອງໂຢເຊັບໄດ້ນຳເຂົາໄປ ແລະຂັງເຂົາໄວ້ໃນຄຸກ ສະຖານທີ່ຊຶ່ງນັກໂທດຂອງກະສັດໄດ້ຖືກຂັງຢູ່. ເຂົາໄດ້ຢູ່ໃນຄຸກນັ້ນ.
[21]ແຕ່ພຣະຢາເວໄດ້ສະຖິດຢູ່ນຳໂຢເຊັບ ແລະ ໄດ້ສຳແດງພັນທະສັນຍາທີ່ສັດຊື່ແກ່ເຂົາ. ພຣະອົງໄດ້ຊົງເຮັດໃຫ້ເຂົາເປັນທີ່ຊອບ ໃນສາຍຕາ
ຜູ້ຄຸມນັກໂທດ.[22]ຜູ້ຄຸມນັກໂທດໄດ້ມອບນັກໂທດທັງຫມົດໃຫ້ຢູ່ໃນມືຂອງໂຢເຊັບ, ບໍ່ວ່າພວກເຂົາຈະເຮັດ
ຫຍັງໃນທີ່ນັ້ນໂຢເຊັບໄດ້ເປັນຜູ້ຈັດການທັງຫມົດ.[23]ຜູ້ຄຸມນັກໂທດບໍ່ຕ້ອງກັງວົນເລື່ອງໃດໆທີ່ຢູ່ໃນມືຂອງເຂົາ, ເພາະວ່າພຣະຢາເວໄດ້ສະຖິດຢູ່ນຳ
ເຂົາ. ບໍ່ວ່າເຂົາຈະເຮັດສິ່ງໃດພຣະຢາເວກໍໄດ້ຊົງເຮັດໃຫ້ປະສົບຄວາມສຳເລັດ.

40 [1]ແລ້ວນີ້ກໍໄດ້ເກີດຂຶ້ນຫລັງຈາກສິ່ງຕ່າງໆເຫລົ່ານີ້, ເຈົ້າພະນັກງານຖວາຍຈອກສະເຫວີຍ ແລະເຈົ້າພະນັກງານເຮັດເຂົ້າຈີ່,ຂອງກະສັດອີຢິບ
ໄດ້ເຮັດໃຫ້ກະສັດອີຢິບ ເຈົ້ານາຍຂອງເຂົາເຄືອງໃຈ.[2]ຟາຣາໂອ ເພິ່ນຈຶ່ງໃຈຮ້າຍເຈົ້າຫນ້າທີ່ທັງສອງຂອງພະອົງ,
ຄືຫົວຫນ້າຄົນຖວາຍຈອກສະເຫວີຍ ແລະຫົວຫນ້າຄົນເຮັດເຂົ້າຈີ່.[3]ພະອົງໄດ້ຂັງພວກເຂົາໄວ້, ໃນບ້ານຂອງຜູ້ບັນຊາການຣາຊອົງຄະລັກໃນຄຸກ
ດຽວກັນກັບທີ່ໂຢເຊັບຖືກຂັງຢູ່.

[4]ພວກເພິ່ນໄດ້ຖືກຂັງມາໄລຍະຫນຶ່ງ. ເຈົ້າພະນັກງານຖວາຍຈອກສະເຫວີຍ ແລະເຈົ້າພະນັກງານເຮັດເຂົ້າຫນົມປັງຂອງກະສັດອີຢິບ
ຊຶ່ງໄດ້ຖືກຂັງໃນຄຸກ.[5]ພວກເຂົາທັງສອງໄດ້ຝັນ ແຕ່ລະຄົນຕ່າງຄົນຕ່າງຝັນໃນຄືນດຽວກັນ, ແລະຄວາມຝັນແຕ່ລະຄວາມຝັນຕ່າງກໍມີ
ຄວາມຫມາຍຂອງມັນເອງ.
[6]ໂຢເຊັບໄດ້ມາຫາພວກເຂົາໃນຕອນເຊົ້າແລະໄດ້ເຫັນພວກເຂົາ. ເບິ່ງແມ, ພວກເພິ່ນເປັນທຸກ.[7]ເຂົາຈຶ່ງຖາມ
ເຈົ້າພະນັກງານຂອງຟາໂຣຜູ້ຊຶ່ງຖືກຂັງຢູ່ກັບເຂົາ ໃນບ້ານຂອງເຈົ້ານາຍຂອງເຂົາ, ກ່າວວ່າ, "ເປັນຫຍັງມື້ນີ້ ເບິ່ງພວກທ່ານເປັນທຸກ
?"[8]ພວກເພິ່ນໄດ້ຕອບແກ່ເຂົາວ່າ, "ເຮົາທັງສອງໄດ້ຝັນ ແລະບໍ່ມີຜູ້ໃດທີ່ສາມາດແກ້ຄວາມຝັນນັ້ນໄດ້." ໂຢເຊັບໄດ້ເວົ້າກັບພວກເພິ່ນວ່າ,
"ການແກ້ຄວາມຝັນນັ້ນບໍ່ແມ່ນເປັນຂອງພຣະເຈົ້າບໍ? ຂໍໄດ້ບອກຂ້ານ້ອຍຟັງເບິ່ງດູ."
[9]ຫົວຫນ້າເຈົ້າພະນັກງານຖວາຍຈອກສະເຫວີຍໄດ້ເລົ່າຄວາມຝັນຂອງຕົນສູ່ໂຢເຊັບຟັງວ່າ, ເຂົາໄດ້ເວົ້າກັບໂຢເຊັບວ່າ, "ໃນຄວາມຝັນຂອງເຮົາ,
ມີເຄືອອະງຸ່ນຢູ່ຕໍ່ຫນ້າເຮົາ.[10]ເທິງເຄືອອະງຸ່ນມີສາມງ່າ. ມັນໄດ້ປົ່ງໃບ, ດອກກໍບານ ແລະມີພວງຫມາກອະງຸ່ນສຸກງ່າ.[11]ຈອກສະເຫວີຍຂອງ
ຟາໂຣໄດ້ຢູ່ໃນມືຂອງເຮົາ. ເຮົາໄດ້ເອົາພວງອະງຸ່ນ ແລະບີບເອົານໍ້າໃສ່ລົງໃນຈອກສະເຫວີຍຂອງຟາໂຣ, ແລະ
ເຮົາກໍໄດ້ຖວາຍຈອກສະເຫວີຍນັ້ນເທິງມືຂອງຟາໂຣ."
[12]ໂຢເຊັບໄດ້ເວົ້າກັບເຂົາວ່າ, "ນີ້ຄືການແກ້ຄວາມຝັນນັ້ນ. ສາມງ່ານັ້ນຫມາຍເຖິງສາມວັນ.[13]ພາຍໃນສາມວັນ ຟາໂຣຈະຍົກທ່ານຂຶ້ນ
ແລະໃຫ້ທ່ານຄືນສູ່ຕໍາແຫນ່ງເດີມຂອງທ່ານ. ທ່ານຈະໄດ້ຍໍຈອກເຫລົ້າອະງຸ່ນຂອງຟາໂຣໃນມືຂອງພະອົງ, ເຫມືອນເມື່ອທ່ານໄດ້ເຄີຍ
ເປັນເຈົ້າພະນັກງານຍໍຈອກເຫລົ້າອາງຸ່ນ.
[14]ແຕ່ຂໍທ່ານໄດ້ລະນຶກເຖິງຂ້ານ້ອຍ ເມື່ອທ່ານໄດ້ດີແລ້ວ, ແລະກະລຸນາສະແດງຄວາມເມດຕາຕໍ່ຂ້ານ້ອຍ. ດ້ວຍການກ່າວເຖິງຂ້ານ້ອຍໃຫ້
ຟາໂຣຟັງ ແລະນໍາຂ້ານ້ອຍອອກໄປຈາກຄຸກນີ້.[15]ເພາະທີ່ຈິງແລ້ວ ຂ້ານ້ອຍໄດ້ຖືກລັກພາຕົວມາຈາກແຜ່ນດິນຂອງຊາວເຮັບເຣີ. ທີ່ນີ້ ຂ້ານ້ອຍກໍ
ບໍ່ໄດ້ເຮັດຜິດຫຍັງທີ່ສົມຄວນໃຫ້ພວກເຂົາຈໍາຈ່ອງຂ້ານ້ອຍໃນຄຸກທີ່ແຂງແຮງມິດຊິດນີ້."
[16]ເມື່ອຫົວຫນ້າພະນັກງານເຮັດເຂົ້າຈີ່ໄດ້ເຫັນວ່າ, ການແກ້ຄວາມຝັນນັ້ນເປັນທີ່ຫນ້າພໍໃຈ, ເພິ່ນຈຶ່ງເວົ້າກັບໂຢເຊັບວ່າ, "ຂ້ອຍກໍໄດ້ຝັນ
ດ້ວຍເຫມືອນກັນ, ຂ້ອຍຝັນວ່າ, ໄດ້ຖືຖາດເຂົ້າຈີ່ສາມຖາດເທິງຫົວຂ້ອຍ.[17]ໃນຖາດເທິງສຸດມີເຂົ້າຈີ່ຢ່າງດີທຸກຊະນິດສໍາລັບຟາໂຣ, ແຕ່ມີຝູງນົກ
ໄດ້ມາກິນເຂົ້າຈີ່ໃນຖາດເທິງຫົວຂອງເຮົາ."
[18]ໂຢເຊັບໄດ້ຕອບແລະເວົ້າວ່າ, "ນີ້ຄືການແກ້ຄວາມຝັນ. ຖາດສາມໃບນັ້ນຫມາຍເຖິງສາມວັນ.[19]ພາຍໃນສາມວັນນີ້ ຟາອາໂຣຈະຍົກຫົວຂອງ
ທ່ານອອກຈາກທ່ານ. ແລະຈະແຂວນທ່ານໄວ້ເທິງຕົ້ນໄມ້ ແລະຝູງນົກຈະມາເຈາະກິນເນື້ອຂອງທ່ານ."
[20]ແລ້ວນີ້ກໍໄດ້ເກີດຂຶ້ນໃນວັນທີສາມ ຊຶ່ງເປັນວັນເກີດຂອງຟາໂຣ. ພະອົງໄດ້ຊົງຈັດງານກິນລ້ຽງສໍາລັບຂ້າຣາຊການຂອງເພິ່ນທຸກຄົນ. ພະອົງໄດ້ຊົງ
ຍົກຫົວຫນ້າເຈົ້າພະນັກງານຖວາຍຈອກສະເຫວີຍ ແລະຫົວຫນ້າເຈົ້າພະນັກງານເຮັດເຂົ້າຈີ່ຂຶ້ນ, ໃນທ່າມກາງຂ້າຣາຊການ
ທັງຫລາຍຂອງພະອົງ.[21]ເພິ່ນໄດ້ຊົງຄືນຕໍາແຫນ່ງໃຫ້ກັບຫົວຫນ້າ ເຈົ້າພະນັກງານ
ຖວາຍຈອກສະເຫວີຍໄດ້ຊົງມອບໃຫ້ເຂົາຮັບຜິດຊອບຖວາຍຈອກສະເຫວີຍເທິງມືຂອງຟາໂຣອີກຄັ້ງ.[22]ແຕ່ພະອົງໄດ້ສັ່ງແຂວນຄໍ, ຫົວຫນ້າ
ເຈົ້າພະນັກງານເຮັດເຂົ້າຈີ່. ເຫມືອນດັ່ງທີ່ໂຢເຊັບໄດ້ແກ້ຄາວມຝັນໃຫ້ພວກເຂົາ.[23]ຫົວຫນ້າເຈົ້າພະນັກງານຖວາຍຈອກສະເຫວີຍ,ບໍ່ໄດ້
ຈົດຈໍາໂຢເຊັບ ແລະໄດ້ລືມເຂົາ.

 generated on Tue Jun 17 19:01:42 2025

41 1ເຫດການນີ້ໄດ້ເກີດຂຶ້ນເມື່ອສິ້ນສຸດສອງປີ ເຕັມເມື່ອຟາໂຣໄດ້ຊົງຝັນວ່າ. ພະອົງໄດ້ຊົງຢືນ,ຢູ່ທີ່ແຄມແມ່ນ້ຳນິນ.2ໃນຂະນະນັ້ນ, ມີແມ່ງົວ
ເຈັດໂຕໄດ້ຂຶ້ນມາຈາກແມ່ນ້ຳນິນ, ຫນ້າເບິ່ງ, ແລະອ້ວນພີ ແລະພວກມັນກິນຫຍ້າທ່າມກາງຕົ້ນກົກ.3ເບິ່ງແມ,
ແລະມີແມ່ງົວອີກເຈັດໂຕທີ່ໄດ້ຕາມຂຶ້ນມາຈາກແມ່ນ້ຳນິນ, ຫນ້າລັງກຽດ ແລະຈ່ອຍຜອມ. ພວກມັນໄດ້ຢືນຢູ່ຂ້າງໆ ກັບແມ່ງົວໂຕອື່ນໆ ເ
ທິງຝັ່ງແມ່ນ້ຳນິນ.

4ຈາກນັ້ນພວກແມ່ງົວທີ່ຫນ້າລັງກຽດ ແລະຈ່ອຍຜອມ ກໍໄດ້ກືນກິນແມ່ງົວເຈັດໂຕທີ່ຫນ້າເບິ່ງ ແລະອ້ວນພີເສຍ. ຈາກນັ້ນຟາໂຣໄດ້ຊົງຕື່ນຂຶ້ນ.
5ຈາກນັ້ນພະອົງກໍຫລັບໄປອີກ ແລະໄດ້ຊົງຝັນເປັນເທື່ອທີສອງ. ເບິ່ງແມ, ມີຕົ້ນເຂົ້າຕົ້ນຫນຶ່ງ, ມີຮວງເຂົ້າເຈັດຮວງທີ່ສົມບູນ ແລະດີ.6ເບິ່ງແມ, ມີ
ຮວງເຂົ້າເຈັດຮວງ,ທີ່ເມັດລີບ ແລະຫ່ຽວແຫ້ງ, ເພາະຕາເວັນອອກໄດ້ງອກຂຶ້ນມາ.
7ຮວງເຂົ້າລີບເຈັດຮວງໄດ້ກືນກິນຮວງເຂົ້າສົມບູນ ແລະດີທັງເຈັດຮວງ. ຟາໂຣໄດ້ຕື່ນຂຶ້ນ, ແລ້ວກໍເຫັນວ່າ,ຕົນກຳລັງຝັນໄປ.
8ໃນຕອນເຊົ້າຂອງມື້ນັ້ນ ເພິ່ນວຸ້ນວາຍໃຈຫລາຍ. ພະອົງກໍເປັນທຸກ ພະອົງໄດ້ສົ່ງຄົນໄປເອີ້ນຫມໍດູ, ຫມໍມໍ, ແລະນັກປຣາດໃນອີຢິບເຂົ້າມາເຝົ້າ
ຟາໂຣໄດ້ຊົງບອກພວກເຂົາເຖິງຄວາມຝັນຂອງພະອົງ, ແຕ່ບໍ່ມີຜູ້ໃດສາມາດແກ້ຄວາມຝັນນັ້ນໃຫ້ຟາໂຣໄດ້.
9ຈາກນັ້ນຫົວຫນ້າພະນັກງານຖວາຍຈອກສະເຫວີຍໄດ້ທູນຟາໂຣວ່າ, "ວັນນີ້ຂ້ານ້ອຍໄດ້ຄິດເຖິງຄວາມຜິດຂອງຂ້ານ້ອຍ.10ຟາໂຣໄດ້ຊົງໃຈຮ້າຍ
ຕໍ່ພວກຄົນຮັບໃຊ້ຂອງພະອົງ, ແລະໄດ້ສັ່ງຂັງຂ້ານ້ອຍໃນບ້ານຂອງຜູ້ບັນຊາການຜູ້ຮັກສາຣາຊວັງ, ທັງຫົວຫນ້າ ພະນັກງານເຮັດເຂົ້າຈີ່,
ແລະຂ້ານ້ອຍ.11ພວກຂ້ານ້ອຍທັງສອງຕ່າງກໍຝັນ, ໃນຄືນດຽວກັນຕ່າງຄົນຕ່າງຝັນຕາມການແກ້ຄວາມຝັນຂອງເຂົາ.
12ມີຊາຍຫນຸ່ມຊາວເຮັບເຣີ,ຄົນຮັບໃຊ້ຂອງຜູ້ບັນຊາການຣາຊອົງຄະລັກໄດ້ຢູ່ກັບພວກຂ້ານ້ອຍ. ພວກຂ້ານ້ອຍໄດ້ບອກເຂົາ ແລະເຂົາໄດ້ແກ້
ຄວາມຝັນໃຫ້. ພວກຂ້ານ້ອຍແຕ່ລະຄົນໄດ້.13ແລະມັນກໍເປັນຢ່າງນັ້ນຕາມທີ່ເຂົາໄດ້ແກ້ຄວາມຝັນນັ້ນໃຫ້ພວກເຮົາ. ຟາໂຣ ໄດ້ຄືນຕຳແຫນ່ງໃຫ້
ຂ້ານ້ອຍ ແຕ່ອີກຄົນຫນຶ່ງເຂົາໄດ້ຖືກແຂວນຄໍ."
14ແລ້ວຟາໂຣໄດ້ຊົງສັ່ງໃຫ້ຄົນໄປນຳເອົາໂຢເຊັບມາ. ພວກເຂົາໄດ້ຮີບໄປນຳເຂົາອອກມາຈາກເຮືອນຈຳ. ເຂົາໄດ້ແຖຫນວດເຄົາຂອງເຂົາເອງ,
ແລະປ່ຽນເຄື່ອງນຸ່ງຂອງເຂົາ, ແລະໄດ້ມາເຂົ້າເຝົ້າ ຟາໂຣ.15ຟາໂຣໄດ້ກ່າວແກ່ໂຢເຊັບວ່າ, "ເຮົາໄດ້ຝັນ, ແລະບໍ່ມີໃຜແກ້ຄວາມຝັນນັ້ນໄດ້.
ແຕ່ເຮົາໄດ້ຍິນເລື່ອງກ່ຽວກັບເຈົ້າ, ວ່າເມື່ອເຈົ້າໄດ້ຍິນເລື່ອງລາວຄວາມຝັນເຈົ້າສາມາດແກ້ຄວາມຝັນນັ້ນໄດ້."16ໂຢເຊັບໄດ້ທູນຕອບ ຟາໂຣ,
ກ່າວວ່າ, "ບໍ່ແມ່ນຂ້ານ້ອຍດອກ. ແຕ່ແມ່ນພຣະເຈົ້າຕ່າງຫາກທີ່ຈະແກ້ຄວາມຝັນຢ່າງດີໃຫ້ທ່ານໄດ້."
17ຟາໂຣໄດ້ກ່າວກັບໂຢເຊັບວ່າ,"ໃນຄວາມຝັນຂອງເຮົາ, ເບິ່ງແມ, ເຮົາໄດ້ຢືນຢູ່ແຄມຝັ່ງແມ່ນ້ຳນິນ.18ນີ້ແລະ, ມີ
ແມ່ງົວເຈັດໂຕຂຶ້ນມາຈາກແມ່ນ້ຳນິນ, ທີ່ຕຸ້ຍພີ ແລະສວຍງາມ, ແລະພວກມັນໄດ້ກິນຫຍ້າທ່າມກາງຕົ້ນກົກ.
19ເບິ່ງແມ, ມີແມ່ງົວອີກເຈັດໂຕຕາມຂຶ້ນມາອ່ອນແອ, ບໍ່ຫນ້າເບິ່ງເລີຍ, ແລະ ຜອມໂຊຫົວແຜ່ນດິນເອຢິບ. ເຮົາບໍ່ເຄີຍເຫັນແມ່ງົວທີ່ຫນ້າ
ເບິ່ງເຊັ່ນນີ້ມາກ່ອນ.20ແມ່ງົວຜອມໂຊ ແລະ ບໍ່ຫນ້າເບິ່ງເຫລົ່ານີ້ໄດ້ກືນກິນແມ່ງົວໂຕທີ່ຕຸ້ຍພີຂຶ້ນມາຕອນທຳອິດ.21ເມື່ອພວກມັນໄດ້ກິນແມ່ງົວ
ອ້ວນພີເຫລົ່ານັ້ນ, ແລ້ວພວກມັນແຮງຈ່ອຍຜອມກວ່າເກົ່າ, ຈາກນັ້ນເຮົາກໍໄດ້ຕື່ນຂຶ້ນ.
22ເຮົາໄດ້ຝັນອີກ, ແລະ ເບິ່ງເຖີດ, ມີຮວງເຂົ້າເຈັດຮວງແຕກອອກມາຈາກຕົ້ນເຂົ້າຕົ້ນຫນຶ່ງເມັດສົມບູນ ແລະ ດີ.23ນີ້ເດ, ມີຮວງເຂົ້າອີກເຈັດ
ຮວງແຕກອອກມາ, ພາຍຫລັງເມັດເຂົ້າລີບ, ແລະ ຫ່ຽວແຫ້ງເພາະຖືກລົມຕາເວັນອອກ.24ຮວງເຂົ້າເມັດລີບໄດ້ກືນກິນຮວງເຂົ້າເມັດ
ຕຶງເຈັດຮວງນັ້ນ. ເຮົາໄດ້ບອກຄວາມຝັນເຫລົ່ານີ້ໃຫ້ພວກມາຍາກົນ, ແຕ່ບໍ່ມີໃຜສາມາດແກ້ຄວາມຝັນເຫລົ່ານີ້ໃຫ້ເຮົາໄດ້."
25ໂຢເຊັບໄດ້ທູນຕໍ່ຟາອາໂຣວ່າ, "ຄວາມຝັນທັງສອງຂອງຟາໂຣມີຄວາມຫມາຍດຽວກັນ. ພຣະເຈົ້າໄດ້ຊົງແຈ້ງ, ໃຫ້ຟາໂຣຮູ້ເຖິງສິ່ງທີ່
ພຣະເຈົ້າຈະຊົງກະທຳ.26ແມ່ງົວທີ່ຕຸ້ຍພີເຈັດໂຕຄືເຈັດປີ, ແລະຮວງເຂົ້າເມັດສົມບູນເຈັດຮວງກໍຄືເຈັດປີ. ຄວາມຝັນທັງສອງຢ່າງ
ເປັນເລື່ອງດຽວກັນ.
27ແມ່ງົວທີ່ຈ່ອຍຜອມ ແລະບໍ່ຫນ້າເບິ່ງເຈັດໂຕທີ່ໄດ້ຂຶ້ນມາພາຍຫລັງຄືເຈັດປີ, ແລະເຊັ່ນດຽວກັນຮວງເຂົ້າເມັດລີບໄຫມ້ກຽມດ້ວຍລົມ
ຕາເວັນອອກ ກໍຈະເປັນເຈັດປີແຫ່ງຄວາມອຶດຢາກອາຫານ.28ນັ້ນຄືສິ່ງທີ່ຂ້ານ້ອຍໄດ້ທູນຕໍ່ຟາໂຣເຖິງສິ່ງທີ່. ພຣະເຈົ້າຈະຊົງກະທຳ ແລະພຣະອົງ
ໄດ້ຊົງເປີດເຜີຍຕໍ່ຟາໂຣ.29ຈົ່ງລະວັງ, ເຈັດປີແຫ່ງຄວາມອຸດົມສົມບູນທີ່ຍິ່ງໃຫຍ່ຈະເກີດຂຶ້ນທົ່ວແຜ່ນດິນອີຢິບ.
30ເຈັດປີແຫ່ງການອຶດຢາກອາຫານຈະຕາມມາ, ແລະຄວາມອຸດົມສົມບູນທີ່ຜ່ານມາໃນແຜ່ນດິດອີຢິບຈະຖືກລືບໄປ, ແລະຄວາມອຶດຢາກຈະ
ທຳລາຍແຜ່ນດິນນັ້ນ.31ຄວາມອຸດົມສົມບູນໃນແຜ່ນດິນຈະບໍ່ຖືກຈົດຈຳ, ເພາະຄວາມອຶດຢາກອາຫານທີ່ຕິດຕາມມານັ້ນ ຮ້າຍແຮງ
ຢ່າງແສນສາຫັດ.32ຟາໂຣໄດ້ຝັນຊ້ຳເພາະວ່າພຣະເຈົ້າຈະເປັນຜູ້ຊົງເຮັດໃຫ້ເກີດຂຶ້ນ, ແລະພຣະເຈົ້າຈະຊົງເຮັດໃຫ້ເກີດຂຶ້ນໃນໄວ້ໆນີ້.
33ຂໍໃຫ້ຟາໂຣຊອກຫາຜູ້ຊາຍທີ່ມີຄວາມເຂົ້າໃຈດີ, ແລະສະຫລຽວສະຫລາດຈັກຄົນຫນຶ່ງ ຕັ້ງເຂົາໃຫ້ປົກຄອງເຫນືອແຜ່ນດິນອີຢິບ.34ຂໍໃຫ້
ຟາໂຣ: ເຮັດສິ່ງນີ້ຄືໃຫ້ພະອົງແຕ່ງຕັ້ງຜູ້ປົກຄອງເຫນືອແຜ່ນດິນ. ໃນປີທີ່ອຸດົມສົມບູນນີ້ໃຫ້ພວກເຂົາເກັບພືດຜົນຂອງອີຢິບຫນຶ່ງໃນ
ຫ້າສ່ວນໃນເຈັດປີທີ່ອຸດົມສົມບູນ.
35ໃຫ້ພວກເຂົາເກັບຮວບຮວມອາຫານທັງຫມົດຂອງປີທີ່ອຸດົມສົມບູນທີ່ກຳລັງມາ ແລະເກັບເຂົ້າດ້ວຍອຳນາດຟາໂຣ, ເພື່ອເປັນອາຫານທີ່ຈະໃຊ້ໃນ
ເມືອງຕ່າງໆ. ພວກເຂົາຕ້ອງດູແລຮັກສາໄວ້.36ອາຫານເຫລົ່ານີ້ຈະຖືກໃຊ້ສຳລັບແຜ່ນດິນໃນຊ່ວງເຈັດປີແຫ່ງການ
ອຶດຢາກອາຫານທີ່ຈະເກີດຂຶ້ນໃນແຜ່ນດິນອີຢິບ. ໂດຍວິທີການນີ້ແຜ່ນດິນ ຈະບໍ່ຖືກທຳລາຍລ້າງດ້ວຍການອຶດຢາກອາຫານ."
37ຄຳແນະນຳນີ້ເປັນສິ່ງທີ່ດີໃນສາຍຕາຂອງ ຟາໂຣ ແລະໃນສາຍຕາຂອງບັນດາຂ້າຣາຊການທັງຫມົດຂອງພະອົງ.38ຟາໂຣໄດ້ກ່າວກັບພວກ
ຂ້າຣາຊການຂອງພະອົງວ່າ, "ເຮົາຈະສາມາດຫາຜູ້ຊາຍເຊັ່ນນີ້, ທີ່ມີພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ດ້ວຍໄດ້ບໍ?"
39ດັ່ງນັ້ນຟາໂຣຈຶ່ງໄດ້ກ່າວກັບໂຢເຊັບວ່າ, "ເພາະ ພຣະເຈົ້າໄດ້ຊົງສຳແດງສິ່ງທັງຫມົດເຫລົ່ານີ້ແກ່ເຈົ້າ, ບໍ່ມີຜູ້ໃດທີ່ມີຄວາມເຂົ້າໃຈ ແລະ
ສະຫລາດເຫມືອນເຈົ້າ.40ເຈົ້າຈະດູແລຣາຊສຳນັກຂອງເຮົາ ແລະປະຊາຊົນຂອງເຮົາທັງຫມົດຈະຖືກປົກຄອງດ້ວຍຄຳເວົ້າຂອງເຈົ້າ. ສະເພາ
ະບັນລັງນີ້ເທົ່ານັ້ນ ທີ່ເຮົາຈະເປັນໃຫຍ່ກວ່າເຈົ້າ.41ຟາໂຣໄດ້ເວົ້າກັບໂຢເຊັບວ່າ, "ເບິ່ງເຖີດ, ເຮົາໄດ້ຕັ້ງເຈົ້າໄວ້ເຫນືອແຜ່ນດິນອີຢິບ."
42ຟາໂຣໄດ້ຖອດແຫວນແຫ່ງອຳນາດອອກຈາກນິ້ວມືຂອງພະອົງ ແລະໄດ້ສວມໃສ່ໃຫ້ກັບໂຢເຊັບ. ພະອົງໄດ້ສວມເສື້ອຜ້າເລນິນຢ່າງດີໃຫ້
ກັບເຂົາ, ແລະສວມສ້ອຍທອງຄຳຄ້ອງຄໍຂອງເຂົາ.43ພະອົງໄດ້ຊົງໃຫ້ເຂົາໃຊ້ລົດມ້າຄັນທີສອງທີ່ພະອົງຊົງເປັນເຈົ້າຂອງ. ຈະມີຜູ້ຊາຍປະກາດ
ໄປຂ້າງຫນ້າເຂົາວ່າ,"ຈົ່ງຄຸກເຂົ່າລົງ." ຟາໂຣໄດ້ຕັ້ງເຂົາໄວ້ເຫນືອແຜ່ນດິນອີຢິບທັງຫມົດ.


generated on Tue Jun 17 19:01:42 2025

[44]ຟາໂຣໄດ້ກ່າວກັບໂຢເຊັບວ່າ, "ເຮົາຄືຟາໂຣ, ແລະທົ່ວທັງແຜ່ນດິນອີຢິບນີ້, ບໍ່ມີໃຜທີ່ຈະຍົກມື ຫລືຍົກຕີນຂອງເຂົາໄດ້
ນອກຈາກເຈົ້າຈະອະນຸຍາດ."[45]ຟາໂຣໄດ້ຕັ້ງຊື່ໃຫ້ໂຢເຊັບວ່າ,"ຊາເຟນາດປາເນອາ." ພະອົງປະທານນາງອາເສນາດລູກສາວຂອງໂປຕິເຟຣາ,
ປະໂລຫິດຂອງເມືອງໂອນ ເປັນເມຍຂອງເຂົາ.
[46]ໂຢເຊັບມີອາຍຸໄດ້ສາມສິບປີ ເມື່ອເພິ່ນໄດ້ຢືນຢູ່ຕໍ່ຫນ້າຟາໂຣ, ກະສັດອີຢິບ. ໂຢເຊັບໄດ້ອອກໄປຈາກການເຂົ້າເຝົ້າຟາໂຣ, ແລະອອກໄປທົ່ວ
ແຜ່ນດິນອີຢິບ.[47]ໃນເຈັດປີແຫ່ງຄວາມອຸດົມສົມບູນ ແຜ່ນດິນໄດ້ໃຫ້ຜົນຜະລິດຢ່າງຫລວງຫລາຍ.
[48]ໃນຕະຫລອດເຈັດປີ ເພິ່ນໄດ້ຮິບໂຮມອາຫານທີ່ມີທັງຫມົດ ໃນແຜ່ນດິນອີຢິບ ແລະເກັບອາຫານນັ້ນໄວ້ໃນເມືອງຕ່າງໆ. ເພິ່ນ
ໄດ້ເກັບອາຫານຂອງແຕ່ລະເມືອງຈາກທົ່ງນາ ແລະພື້ນທີ່ຮອບໆເມືອງໄວ້ທີ່ແຕ່ລະເມືອງນັ້ນ.[49]ໂຢເຊັບໄດ້ເກັບຮັກສາເຂົ້າໄວ້ຢ່າງຫລວງຫລາຍ
ເຫມືອນຊາຍແຫ່ງທ້ອງທະເລ, ຫລາຍຈົນກະທັ້ງເຂົາຕ້ອງສັ່ງໃຫ້ເຊົາເຮັດບັນຊີ, ເນື່ອງຈາກມັນມີຫລາຍເກີນກວ່າທີ່ຈະນັບໄດ້.
[50]ກ່ອນທີ່ປີແຫ່ງການອຶດຢາກຈະມາເຖິງ, ໂຢເຊັບໄດ້ມີລູກຊາຍສອງຄົນກັບນາງອາເສນາດ,ລູກສາວຂອງໂປຕິເຟຣາ ປະໂລຫິດ ເມືອງ
ໂອນເປັນຜູ້ໃຫ້ກຳເນີດແກ່ເຂົາ.[51]ໂຢເຊັບໄດ້ເອີ້ນຊື່ລູກຊາຍກົກຂອງເຂົາວ່າ, ມານາເຊ ເພາະເຂົາໄດ້ກ່າວວ່າ, "ພຣະເຈົ້າໄດ້ເຮັດໃຫ້ຂ້ອຍລືມ
ຄວາມຍາກລຳບາກທັງຫມົດຂອງຂ້ອຍ ແລະຄົວເຮືອນທັງຫມົດຂອງພໍ່ຂ້ອຍ."[52]ເພິ່ນໄດ້ເອີ້ນຊື່ລູກຊາຍຄົນທີສອງວ່າ ເອຟຣາອິມ,
ເພາະເຂົາໄດ້ກ່າວວ່າ,"ພຣະເຈົ້າໄດ້ຊົງກະທຳໃຫ້ຂ້ອຍມີຫມາກຜົນໃນດິນແດນແຫ່ງ ຄວາມຍາກລຳບາກຂອງຂ້ອຍ."
[53]ເຈັດປີແຫ່ງຄວາມອຸດົມສົມບູນ ໃນແຜ່ນດິນອີຢິບກໍໄດ້ສິ້ນສຸດລົງ.[54]ເຈັດປີແຫ່ງການອຶດຢາກອາຫານໄດ້ເລີ່ມຕົ້ນ, ຕາມທີ່ໂຢເຊັບໄດ້ກ່າວໄວ້.
ເກີດການອຶດຢາກອາຫານຂຶ້ນທົ່ວແຜ່ນດິນ, ແຕ່ຢູ່ໃນແຜ່ນດິນອີຢິບຍັງມີອາຫານກິນ.
[55]ເມື່ອເກີດການອຶດຢາກຂຶ້ນທົ່ວທັງແຜ່ນດິນອີຢິບ, ປະຊາຊົນໄດ້ມາຮ້ອງຂໍອາຫານຈາກຟາໂຣ. ຟາໂຣໄດ້ກ່າວກັບປະຊາຊົນອີຢິບທັງຫມົດວ່າ, "
ຈົ່ງໄປຫາໂຢເຊັບ ແລະຈົ່ງເຮັດຕາມທີ່ເຂົາບອກໃຫ້ເຮັດ".[56]ການອຶດຢາກອາຫານໄດ້ເກີດຂຶ້ນທົ່ວທັງແຜ່ນດິນ. ໂຢເຊັບໄດ້ໄຂສາງເຂົ້າທັງຫມົດ
ແລະຂາຍອາຫານໃຫ້ແກ່ປະຊາຊົນອີຢິບ.[57]ປະຊາຊົນຈາກທົ່ວທັງແຜ່ນດິນໄດ້ມາຍັງອີຢິບ ເພື່ອຂໍຊື້ເຂົ້າຈາກໂຢເຊັບ, ເພາະວ່າໄດ້ເກີດການ
ອຶດຢາກຢ່າງຮ້າຍແຮງຂຶ້ນທົ່ວທັງແຜ່ນດິນ.

42 [1]ເມື່ອຢາໂຄບຮູ້ວ່າຢູ່ທີ່ປະເທດອີຢິບຍັງມີເຂົ້າຂາຍ. ເພິ່ນກໍເວົ້າຕໍ່ພວກລູກຊາຍຂອງເພິ່ນວ່າ, "ພວກເຈົ້າພາກັນຢູ່ລ້າໆເຮັດ
ຫຍັງ?"[2]ເພິ່ນເວົ້າວ່າ,"ເບິ່ງນີ້, ເຮົາໄດ້ຍິນວ່າທີ່ໃນອີຢິບມີເຂົ້າຂາຍ. ຈົ່ງລົງໄປທີ່ນັ້ນ ແລະຊື້ເຂົ້າຈາກທີ່ນັ້ນມາໃຫ້ເຮົາ ເພື່ອທີ່ເຮົາຈະ
ໄດ້ມີຊີວິດຢູ່."[3]ອ້າຍທັງສິບຄົນຂອງໂຢເຊັບ ໄດ້ລົງໄປຊື້ເຂົ້າຈາກອີຢິບ.[4]ແຕ່ເບັນຢາມິນ, ນ້ອງຊາຍຂອງໂຢເຊັບນັ້ນ, ຢາໂຄບບໍ່ໄດ້ສົ່ງໄປກັບ
ພວກອ້າຍຂອງເຂົາ, ເພາະເຂົາຢ້ານວ່າເບັນຢາມິນຈະໄດ້ຮັບອັນຕະລາຍເນື່ອງດ້ວຍການອຶດຢາກອາຫານຊຶ່ງເກີດໃນແຜ່ນດິນການາອານ.

[5]ພວກລູກຊາຍຂອງຢາໂຄບໄດ້ເດີນທາງມາ, ເພື່ອທີ່ຈະຊື້ເຂົ້າທ່າມກາງຄົນທັງຫລາຍທີ່ມານັ້ນ.[6]ບັດນີ້ໂຢເຊັບໄດ້ເປັນຜູ້ປົກຄອງ
ເຫນືອແຜ່ນດິນນັ້ນ. ເພິ່ນໄດ້ເປັນຜູ້ຂາຍເຂົ້າໃຫ້ກັບຄົນທັງແຜ່ນດິນແຕ່ພຽງຜູ້ດຽວ. ພວກອ້າຍຂອງໂຢເຊັບໄດ້ມາ ແລະໂຄ້ງຄຳນັບເພິ່ນ
ຫນ້າຂອງພວກເຂົາເຖິງພື້ນ.
[7]ໂຢເຊັບໄດ້ເຫັນພວກອ້າຍ ເພິ່ນກໍຈື່ພວກເຂົາໄດ້, ແຕ່ເພິ່ນໄດ້ປົກປິດຕົວເພິ່ນເອງຈາກພວກເຂົາ ແລະໄດ້ເວົ້າຢ່າງມີອຳນາດກັບພວກເຂົາ.
ເພິ່ນໄດ້ເວົ້າກັບພວກເຂົາວ່າ, "ພວກເຈົ້າມາແຕ່ໃສ?" ພວກເຂົາຕອບວ່າ, "ຈາກແຜ່ນດິນການາອານເພື່ອຂໍຊື້ອາຫານ."[8]ໂຢເຊັບຈື່ພວກອ້າຍ
ຂອງຕົນໄດ້, ແຕ່ພວກເຂົາຈື່ໂຢເຊັບບໍ່ໄດ້.
[9]ແລ້ວໂຢເຊັບກໍໄດ້ລະນຶກເຖິງຄວາມຝັນທີ່ເພິ່ນໄດ້ຝັນກ່ຽວກັບພວກເຂົາ, ແລະເພິ່ນໄດ້ເວົ້າກັບພວກເຂົາວ່າ, "ພວກເຈົ້າເປັນຄົນສອດແນມ!
ພວກເຈົ້າໄດ້ມາເພື່ອທີ່ຈະເບິ່ງຈຸດອ່ອນທີ່ບໍ່ໄດ້ມີການປ້ອງກັນຂອງແຜ່ນດິນ."[10]ພວກເຂົາໄດ້ເວົ້າກັບເພິ່ນວ່າ, "ບໍ່ແມ່ນດອກເຈົ້ານາຍຂອງຂ້ານ້ອຍ
ພວກຄົນຮັບໃຊ້ຂອງທ່ານໄດ້ມາເພື່ອທີ່ຈະຊື້ອາຫານ.[11]ພວກຂ້ານ້ອຍທັງຫມົດເປັນລູກຊາຍຮ່ວມພໍ່ດຽວກັນ. ພວກຂ້ານ້ອຍເປັນຄົນ
ສັດຊື່ພວກຄົນຮັບໃຊ້ຂອງທ່ານບໍ່ແມ່ນຄົນສອດແນມ."
[12]ເພິ່ນໄດ້ເວົ້າກັບພວກເຂົາວ່າ, "ບໍ່ແມ່ນດອກ, ພວກເຈົ້າໄດ້ມາເພື່ອເບິ່ງສ່ວນທີ່ໆບໍ່ໄດ້ມີການປ້ອງກັນຂອງແຜ່ນດິນ."[13]ພວກເຂົາໄດ້ເວົ້າວ່າ,
"ພວກຂ້ານ້ອຍ, ພວກຄົນຮັບໃຊ້ຂອງທ່ານ ມີອ້າຍນ້ອງນຳກັນສິບສອງຄົນ, ເປັນພວກລູກຊາຍຮ່ວມພໍ່ດຽວກັນໃນແຜ່ນດິນການາອານ.
ເບິ່ງເທາະ, ນ້ອງຊາຍຫລ້າຂະນະນີ້ຢູ່ກັບພໍ່ຂອງພວກເຮົາ, ແລະນ້ອງຊາຍອີກຄົນຫນຶ່ງກໍໄດ້ເສຍຊີວິດໄປແລ້ວ."
[14]ໂຢເຊັບໄດ້ເວົ້າກັບພວກເຂົາວ່າ, "ມັນເປັນຢ່າງທີ່ເຮົາໄດ້ເວົ້າກັບພວກເຈົ້າແລ້ວ; ພວກເຈົ້າເປັນຄົນສອດແນມ.[15]ດ້ວຍເຫດນີ້
ເຈົ້າຕ້ອງຖືກກວດສອບຟາໂຣຊົງພະຊົນຢູ່ສັນໃດ, ພວກເຈົ້າຈະໄປຈາກທີ່ນີ້ບໍ່ໄດ້, ນອກຈາກວ່ານ້ອງຊາຍຫລ້າຂອງພວກເຈົ້າຈະມາທີ່ນີ້.[16]ຈົ່ງສົ່ງ
ພວກເຈົ້າຄົນໃດຄົນຫນຶ່ງໃຫ້ໄປພານ້ອງຊາຍຂອງພວກເຈົ້າມາ. ເພື່ອຈະພິສູດຄຳເວົ້າຂອງພວກເຈົ້າວ່າເປັນຄວາມຈິງຫລືບໍ່,
ແລະໃຫ້ຂັງພວກເຈົ້າທີ່ຍັງເຫລືອໄວ້ໃນຄຸກ."[17]ເພິ່ນໄດ້ສັ່ງຂັງພວກເຂົາທັງຫມົດໄວ້ເປັນເວລາສາມວັນ.
[18]ໃນວັນທີສາມ ໂຢເຊັບຈຶ່ງເວົ້າກັບພວກເຂົາວ່າ, "ເພາະເຮົາຢຳເກງພຣະເຈົ້າ, ຈົ່ງເຮັດຢ່າງນີ້ເພື່ອຈະລອດຊີວິດໄດ້.[19]ຄືຖ້າພວກເຈົ້າເປັນຄົນ
ສັດຊື່, ກໍໃຫ້ພີ່ນ້ອງຄົນຫນຶ່ງຂອງພວກເຈົ້າຍັງຢູ່ໃນຄຸກນີ້, ແຕ່ພວກເຈົ້າທີ່ເຫລືອໃຫ້ນຳເອົາເຂົ້າກັບໄປ, ເພື່ອບັນເທົາການອຶດຫິວໃນບ້ານຂອງ
ພວກເຈົ້າ.[20]ຈົ່ງນຳນ້ອງຊາຍຫລ້າຂອງພວກເຈົ້າມາຫາເຮົາ ເພື່ອຢືນຢັນຄຳເວົ້າຂອງພວກເຈົ້າ ແລະພວກເຈົ້າຈະບໍ່ຕາຍ." ດັ່ງນັ້ນ ພວກເຂົາ
ກໍໄດ້ເຮັດຕາມນັ້ນ.
[21]ພວກເຂົາຈຶ່ງເວົ້າກັນວ່າ, "ພວກເຮົາມີຄວາມຜິດຈິງໆກ່ຽວກັບນ້ອງຊາຍຂອງພວກເຮົາທີ່ພວກເຮົາ
ໄດ້ເຫັນຄວາມເຈັບປວດຂອງຈິດວິນຍານຂອງເຂົາ ເມື່ອເຂົາໄດ້ຂໍຮ້ອງພວກເຮົາ. ແຕ່ພວກເຮົາບໍ່ຍອມຟັງເຂົາ ດັ່ງນັ້ນຄວາມເຈັບປວດນີ້ຈຶ່ງໄດ້
ຢ້ອນກັບມາຖືກພວກເຮົາ."[22]ຣູເບັນໄດ້ຕອບພວກເຂົາວ່າ, "ຂ້ອຍບໍ່ໄດ້ບອກພວກເຈົ້າບໍ? "ວ່າຢ່າເຮັດບາບຕໍ່ເດັກຄົນນັ້ນ," ແຕ່ພວກເຈົ້າບໍ່ຍອມຟັງ
ຂ້ອຍເລີຍ ບັດນີ້, ເບິ່ງແມ, ເລືອດຂອງເຂົາໄດ້ຮຽກຮ້ອງຕໍ່ພວກເຮົາ."
[23]ພວກເຂົາບໍ່ໄດ້ຮູ້ວ່າໂຢເຊັບໄດ້ເຂົ້າໃຈທີ່ພວກເຂົາເວົ້າ, ເພາະວ່າມີລ່າມລະຫວ່າງພວກເຂົາ.[24]ເພິ່ນໄດ້ອອກໄປຈາກພວກເຂົາ ແລະຮ້ອງໄຫ້ຢູ່ຜູ້
ດຽວ. ເພິ່ນໄດ້ກັບມາຫາພວກເຂົາ ແລະເວົ້າກັບພວກເຂົາ ເພິ່ນໄດ້ເລືອກເອົາຊີເມໂອນຈາກພວກເຂົາ ແລະໄດ້ມັດເຂົາຕໍ່ຫນ້າພວກເຂົາ.
[25]ຈາກນັ້ນໂຢເຊັບໄດ້ສັ່ງໃຫ້ຄົນຮັບໃຊ້ຂອງເຂົາໃສ່ເຂົ້າໃຫ້ເຕັມກະສອບຂອງພວກອ້າຍ, ແລະໃຫ້ໃສ່ເງິນຂອງທຸກຄົນກັບລົງໄປໃນ
ກະສອບຂອງເຂົາດ້ວຍ, ແລະຈັດຕຽມການເດີນທາງໃຫ້ພວກເຂົາ. ມັນໄດ້ຖືກດຳເນີນການເພື່ອພວກເຂົາ.
[26]ພວກອ້າຍໄດ້ເອົາເຂົ້າບັນທຸກໃສ່ຫລັງລໍ ຂອງພວກເຂົາແລ້ວໄດ້ເດີນທາງອອກໄປຈາກທີ່ນັ້ນ.[27]ເມື່ອເຖິງທີ່ພັກພວກເຂົາ ຄົນ
ຫນຶ່ງໄດ້ເປີດກະສອບເຂົ້າຂອງພວກເຂົາເພື່ອເອົາເຂົ້າໃຫ້ລໍຂອງເຂົາ, ເຂົາໄດ້ເຫັນເງິນຂອງເຂົາ. ເບິ່ງເຖີດ, ມັນຢູ່ໃນກະສອບຂອງເຂົາທີ່ເປີດຢູ່.
[28]ເຂົາໄດ້ເວົ້າກັບພວກອ້າຍນ້ອງຂອງຕົນວ່າ, "ເງິນຂອງຂ້ອຍໄດ້ຖືກນຳກັບມາ. ເບິ່ງແມ; ມັນຢູ່ໃນກະສອບຂອງຂ້ອຍ." ພວກເຂົາໄດ້ຂວັນເສຍ
ແລະພວກເຂົາພາກັນຕົວສັ່ນເວົ້າວ່າ, ນີ້ຄືຫຍັງ, "ທີ່ພຣະເຈົ້າໄດ້ຊົງກະທຳກັບພວກເຮົາ?"
[29] ພວກເຂົາໄດ້ກັບໄປຫາຢາໂຄບ, ພໍ່ຂອງພວກເຂົາໃນແຜ່ນດິນການາອານ ແລະ ບອກເຂົາເຖິງເລື່ອງທີ່ໄດ້ເກີດຂຶ້ນກັບພວກຕົນທຸກຢ່າງ.
ພວກເຂົາໄດ້ເວົ້າວ່າ,[30]"ຜູ້ຊາຍຄົນນັ້ນ, ທີ່ເປັນເຈົ້ານາຍຂອງແຜ່ນດິນ,ໄດ້ເວົ້າຢ່າງຮຸນແຮງກັບພວກເຮົາ ແລະ ໄດ້ຄິດວ່າ ພວກເຮົາເປັນ
ຄົນສອດແນມເຂົ້າໄປສອດແນມໃນແຜ່ນດິນນັ້ນ.[31]ເຮົາໄດ້ເວົ້າກັບເຂົາວ່າ, "ພວກເຮົາເປັນຄົນສັດຊື່. ພວກເຮົາບໍ່ແມ່ນຄົນສອດແນມ.[32]ພວກເຮົາ
ມີອ້າຍນ້ອງສິບສອງຄົນ, ເປັນລູກຊາຍທັງຫລາຍຈາກພໍ່ດຽວກັນ. ຄົນຫນຶ່ງໄດ້ຕາຍໄປແລ້ວ, ແລະ ໃນວັນນີ້ນ້ອງຊາຍຫລ້າຍັງຢູ່ກັບພໍ່
ຂອງພວກເຮົາໃນແຜ່ນດິນການາອານ."
[33]ຜູ້ຊາຍຄົນນັ້ນ, ເຈົ້ານາຍຂອງແຜ່ນດິນ, ໄດ້ເວົ້າກັບພວກເຮົາວ່າ, 'ໂດຍວິທີນີ້ ເຮົາຈຶ່ງຈະຮູ້ວ່າພວກເຈົ້າເປັນຄົນສັດຊື່ຈິງຫລືບໍ່. ປະພີ່ນ້ອງຄົນ
ຫນຶ່ງໄວ້ກັບເຮົາ, ນຳເຂົ້າກັບໄປເພື່ອບັນເທົາການອຶດຫິວອາຫານໃນບ້ານຂອງພວກເຈົ້າ, ແລະໄປຕາມທາງຂອງພວກເຈົ້າ.[34]ຈົ່ງນຳນ້ອງຊາຍຫລ້າ
ມາຫາເຮົາ. ແລ້ວເຮົາຈະຮູ້ວ່າ ພວກເຈົ້າບໍ່ແມ່ນຄົນສອດແນມ, ແຕ່ເປັນຄົນສັດຊື່. ຈາກນັ້ນເຮົາຈະປ່ອຍພີ່ນ້ອງຂອງພວກເຈົ້າໃຫ້ກັບພວກເຈົ້າ,
ແລະພວກເຈົ້າຈະຄ້າຂາຍໃນແຜ່ນດິນນັ້ນ.""
[35]ແລ້ວກໍເປັນຢ່າງນັ້ນເມື່ອພວກເຂົາໄດ້ນຳເຂົ້າອອກຈາກກະສອບ, ເບິ່ງເຖີດ, ກະສອບຂອງພວກເຂົາ, ກໍມີເງິນຢູ່ທຸກກະສອບ. ເມື່ອພວກເຂົາ
ແລະ ພໍ່ຂອງພວກເຂົາໄດ້ເຫັນວ່າກະສອບຂອງພວກເຂົາມີເງິນຢູ່ພວກເຂົາກໍຢ້ານກົວຫລາຍ.[36]ຢາໂຄບພໍ່ຂອງພວກເຂົາຈຶ່ງເວົ້າກັບພວກເຂົາວ່າ,
"ພວກເຈົ້າໄດ້ເຮັດໃຫ້ເຮົາສູນເສຍພວກລູກຊາຍຂອງເຮົາ. ໂຢເຊັບກໍໄດ້ຕາຍໄປແລ້ວ, ຊີເມໂອນກໍໄດ້ຈາກໄປ, ແລະ ພວກເຈົ້າຈະມາເອົາ
ເບັນຢາມິນໄປອີກ. ທັງຫມົດເຫລົ່ານີ້ທຳຮ້າຍເຮົາ."
[37]ຣູເບັນຈຶ່ງເວົ້າກັບພໍ່ຂອງເຂົາ, ກ່າວວ່າ,"ຂໍໃຫ້ພໍ່ຂ້າລູກຊາຍສອງຄົນຂອງຂ້ອຍ ຖ້າຂ້ອຍບໍ່ນຳເບັນຢາມິນກັບມາໃຫ້ທ່ານ.
ມອບເຂົາໄວ້ໃນມືຂອ້ຍ, ແລະຂ້ອຍຈະນຳເຂົາກັບມາຫາທ່ານອີກ."[38]ແຕ່ຢາໂຄບເວົ້າວ່າ, "ລູກຊາຍຂອງເຮົາຈະບໍ່ລົງໄປນຳພວກເຈົ້າ.

 generated on Tue Jun 17 19:01:42 2025

ເພາະວ່າອ້າຍຂອງເຂົາໄດ້ຕາຍໄປແລ້ວ ເຫລືອເຂົາພຽງຄົນດຽວ. ຫາກເກີດອັນຕະລາຍກັບເຂົາໃນລະຫວ່າງທາງທີ່ພວກເຈົ້າໄປນັ້ນ, ເທົ່າກັບວ່າພວກເຈົ້າຈະນຳຜົມຫງອກຂອງເຮົາພ້ອມກັບຄວາມໂສກເສົ້າ ລົງສູ່ແດນຄົນຕາຍກໍໄດ້."


generated on Tue Jun 17 19:01:42 2025

43 [1]ຄວາມອຶດຢາກອາຫານໃນແຜ່ນດິນນັ້ນຮ້າຍແຮງຫນັກຂຶ້ນ.[2]ຢູ່ມາເມື່ອພວກເຂົາໄດ້ກິນເຂົ້າທີ່ພວກເຂົາໄດ້ຊື້ມາຈາກອີຢິບຫມົດແລ້ວ,
ພໍ່ຂອງພວກເຂົາໄດ້ເວົ້າກັບພວກເຂົາວ່າ, "ຈົ່ງໄປ; ແລະຊື້ອາຫານມາໃຫ້ເຮົາອີກ."

[3]ຢູດາຕອບວ່າ, "ຜູ້ຊາຍຄົນນັ້ນໄດ້ບອກພວກເຮົາຢ່າງເດັດຂາດວ່າ, "ຢ່າໄປໃຫ້ເພິ່ນເຫັນຫນ້າ ຈົນກວ່າພວກເຮົາຈະນໍານ້ອງຊາຍຫລ້າໄປດ້ວຍ.
[4]ຖ້າພໍ່ໃຫ້ນ້ອງຊາຍຂອງພວກເຮົາ ໄປກັບພວກເຮົາ, ພວກເຮົາຈະລົງໄປຊື້ອາຫານມາໃຫ້ພໍ່.[5]ແຕ່ຖ້າພໍ່ບໍ່ໃຫ້ເຂົາໄປ, ພວກເຮົາກໍຈະບໍ່ລົງໄປ. ເພາະ
ຜູ້ຊາຍຄົນນັ້ນໄດ້ເວົ້າກັບພວກເຮົາວ່າ, "ພວກເຈົ້າຢ່າມາໃຫ້ເຫັນຫນ້າ ຈົນກວ່າພວກເຮົາຈະພານ້ອງຊາຍຂອງພວກເຮົາໄປດ້ວຍ.""
[6]ອິສະຣາເອນໄດ້ເວົ້າວ່າ, "ເປັນຫຍັງພວກເຈົ້າໄດ້ເຮັດສິ່ງທີ່ຫຍຸ້ງຍາກກັບເຮົາ ດ້ວຍການບອກຜູ້ຊາຍຄົນນັ້ນວ່າ ພວກເຈົ້າຍັງມີນ້ອງຊາຍອີກ
ຄົນຫນຶ່ງ?"[7]ພວກເຂົາໄດ້ເວົ້າວ່າ,"ຜູ້ຊາຍຄົນນັ້ນໄດ້ຖາມລາຍລະອຽດກ່ຽວກັບພວກເຮົາ ແລະຄອບຄົວຂອງພວກເຮົາ. ເຂົາໄດ້ຖາມວ່າ, "ພໍ່ຂອງ
ພວກເຈົ້າຍັງມີຊີວິດຢູ່ບໍ? ພວກເຈົ້າມີພີ່ນ້ອງອີກຄົນຫນຶ່ງບໍ?" ພວກເຮົາໄດ້ຕອບຕາມຄໍາຖາມເຫລົ່ານີ້. ພວກເຮົາຈະຮູ້ໄດ້ຢ່າງໃດວ່າ ເພິ່ນຈະ
ເວົ້າວ່າ, "ຈົ່ງນໍານ້ອງຊາຍຂອງພວກເຈົ້າລົງມາ?""
[8]ຢູດາເວົ້າກັບ ອິສະຣາເອນພໍ່ຂອງຕົນວ່າ, "ຈົ່ງໃຫ້ເດັກນັ້ນໄປກັບລູກ. ພວກເຮົາຈະລຸກຂຶ້ນແລະໄປ ເພື່ອພວກເຮົາຈະມີຊີວິດ ແລະບໍ່ຕາຍ,
ທັງພວກເຮົາ, ພໍ່, ແລະລູກທັງຫລາຍຂອງພວກເຮົາ.[9]ລູກຂໍເປັນຕົວປະກັນເພື່ອເຂົາເອງ.ພໍ່ໃຫ້ລູກຮັບຜິດຊອບໄດ້. ຖ້າລູກບໍ່ນໍາເຂົາກັບມາ
ໃຫ້ພໍ່ແລະຈະມອບເຂົາຕໍ່ຫນ້າພໍ່ກໍຂໍໃຫ້ລູກໄດ້ຮັບການປະນາມຕະຫລອດໄປ.[10]ເພາະຖ້າພວກເຮົາບໍ່ຊັກຊ້າຢູ່, ແນ່ນອນປານນີ້ ພວກເຮົາກໍຄົງຈະ
ກັບມາທີ່ນີ້ເປັນຖ້ຽວທີສອງແລ້ວ."
[11]ອິສະຣາເອນພໍ່ຂອງພວກເຂົາໄດ້ເວົ້າກັບພວກເຂົາວ່າ, "ຖ້າເປັນຢ່າງນັ້ນກໍຈົ່ງເຮັດເລື່ອງນີ້ດຽວນີ້. ຈົ່ງນໍາສິ່ງທີ່ດີທີ່ສຸດຂອງແຜ່ນດິນນີ້ບາງສ່ວນ
ໃສ່ໃນກະສອບທັງຫລາຍຂອງພວກເຈົ້າ. ແບກລົງໄປໃຫ້ຜູ້ຊາຍຄົນນັ້ນເປັນຂອງຂວັນຄື: ນ້ໍາມັນພືດທີ່ມີກິ່ນຫອມ, ແລະນ້ໍາເຜິ້ງ, ເຄື່ອງເທດ,
ແລະຢາງໄມ້ຫອມຫມາກກໍ່. ແລະອາມອນ.[12]ຈົ່ງຖືເງິນໄປນໍາສອງເທົ່າ. ເງິນທີ່ໄດ້ຖືກນໍາກັບມາໃນກະສອບທັງຫລາຍຂອງພວກເຈົ້າກັບໄປ. ບາງທີ
ອາດຈະເປັນຄວາມຜິດພາດ.
[13]ພານ້ອງຊາຍຂອງພວກເຈົ້າໄປດ້ວຍ. ຈົ່ງລຸກຂຶ້ນ ແລະໄປຫາຜູ້ຊາຍຄົນນັ້ນອີກຄັ້ງ.[14]ຂໍພຣະເຈົ້າອົງຊົງຣິດອໍານາດປຣະທານຄວາມເມດຕາແກ່
ພວກເຈົ້າຕໍ່ຫນ້າຜູ້ຊາຍຄົນນັ້ນ, ເພື່ອວ່າເພິ່ນຈະໄດ້ປົດປ່ອຍພີ່ນ້ອງອີກຄົນຂອງພວກເຈົ້າ. ຖ້າເຮົາຖືກເຮັດໃຫ້ສູນເສຍລູກທັງສອງຂອງເຮົາ, ເຮົາ
ກໍຖືກເຮັດໃຫ້ສູນເສຍ."[15]ພວກລູກຊາຍໄດ້ນໍາຂອງຂວັນນີ້, ແລະໃນມືຂອງພວກເຂົາມີເງິນຈໍານວນສອງເທົ່າ, ໄປພ້ອມກັບເບັນຢາມິນ.
ພວກເຂົາໄດ້ລຸກຂຶ້ນ ແລະລົງໄປຍັງອີຢິບ ແລະໄດ້ຢືນຢູ່ຕໍ່ຫນ້າໂຢເຊັບ.
[16]ເມື່ອໂຢເຊັບໄດ້ເຫັນເບັນຢາມິນມາກັບພວກເຂົາ, ເພິ່ນໄດ້ເວົ້າກັບພໍ່ບ້ານຂອງເພິ່ນວ່າ, "ຈົ່ງນໍາພວກຜູ້ຊາຍເຂົ້າມາໃນເຮືອນ, ຂ້າສັດໂຕຫນຶ່ງ
ແລະຈັດຕຽມອາຫານ, ເພາະພວກຜູ້ຊາຍນັ້ນຈະກິນອາຫານກັບເຮົາທ່ຽງນີ້."[17]ພໍ່ບ້ານນັ້ນໄດ້ເຮັດຕາມທີ່ໂຢເຊັບສັ່ງ. ເຂົາໄດ້ນໍາ
ພວກຜູ້ຊາຍນັ້ນເຂົ້າໄປໃນເຮືອນຂອງໂຢເຊັບ.
[18]ພວກຜູ້ຊາຍນັ້ນກໍຢ້ານກົວ ເພາະວ່າພວກເຂົາຖືກນໍາເຂົ້າໄປໃນເຮືອນຂອງໂຢເຊັບ.ພວກເຂົາໄດ້ເວົ້າວ່າ,"ມັນເປັນເພາະເງິນນັ້ນທີ່
ກັບເຂົ້າມາຢູ່ໃນກະສອບຂອງພວກເຮົາ ຄັ້ງແລກທີ່ເຮົາທີ່ເຮົາໄດ້ຖືກນໍາເຂົ້າມາ, ບາງທີເຂົາອາດຈະຫາໂອກາດຫາເລື່ອງພວກເຮົາ
ເຂົາອາດຈະຈັບພວກເຮົາ, ແລະເອົາພວກເຮົາໄປເປັນທາດ, ແລະຍຶດລໍທັງຫລາຍຂອງພວກເຮົາ."[19]ພວກເຂົາໄດ້ເຂົ້າໄປຫາພໍ່ບ້ານຂອງໂຢເຊັບ,
ແລະພວກເຂົາໄດ້ເວົ້າກັບເຂົາທີ່ປະຕູບ້ານ,[20]ເວົ້າວ່າ, "ເຈົ້ານາຍຂອງຂ້ານ້ອຍ, ພວກເຮົາໄດ້ລົງມາຄັ້ງແລກເພື່ອຊື້ອາຫານ.
[21]ມັນກໍເກີດຂຶ້ນ, ເມື່ອພວກເຮົາໄດ້ໄປເຖິງທີ່ພັກ, ພວກເຮົາໄດ້ເປີດກະສອບເຂົ້າຂອງພວກເຮົາ, ແລະ ເບິ່ງເຖີດເງິນຂອງທຸກຄົນໄດ້ຢູ່ຄົບ
ໃນກະສອບຂອງແຕ່ລະຄົນ. ພວກເຮົາໄດ້ນໍາມັນກັບມາໃນມືຂອງພວກເຮົາ.[22]ເງິນອື່ນໆພວກເຮົາກໍໄດ້ຖືມານໍາເພື່ອຊື້ອາຫານ.
ພວກເຮົາບໍ່ຮູ້ວ່າໃຜໄດ້ເອົາເງິນຂອງພວກເຮົາໃສ່ໃນກະສອບຂອງພວກເຮົາ."[23]ພໍ່ບ້ານນັ້ນໄດ້ເວົ້າວ່າ, "ສັນຕິສຸກຈົ່ງມີແກ່ພວກທ່ານ,
ຢ່າຢ້ານເລີຍ, ພຣະເຈົ້າຂອງພວກເຈົ້າ ແລະ ພຣະເຈົ້າຂອງພໍ່ພວກເຈົ້າຕ້ອງເປັນຜູ້ນໍາເງິນຂອງພວກເຈົ້າໃສ່ໃນກະສອບເຂົ້າຂອງພວກເຈົ້າ.
ເຮົາໄດ້ຮັບເງິນຂອງພວກເຈົ້າແລ້ວ." ຈາກນັ້ນພໍ່ບ້ານໄດ້ນໍາຊີເມໂອນອອກມາຫາພວກເຂົາ.
[24]ພໍ່ບ້ານຂອງໂຢເຊັບໄດ້ນໍາພວກເຂົາທັງຫລາຍເຂົ້າໄປໃນເຮືອນຂອງໂຢເຊັບ. ລາວໄດ້ໃຫ້ນ້ໍາແກ່ພວກເຂົາ, ແລະ ພວກເຂົາໄດ້ລ້າງ
ຕີນຂອງພວກເຂົາ. ລາວເອົາເຟືອງໃຫ້ລໍຂອງພວກເຂົາກິນ.[25]ພວກເຂົາໄດ້ຕຽມຂອງຂວັນທັງຫລາຍສໍາລັບການມາຂອງໂຢເຊັບໃນເວລາທ່ຽງວັນ,
ເພາະພວກເຂົາໄດ້ຍິນວ່າເພິ່ນຈະມາກິນອາຫານທ່ຽງທີ່ນັ້ນ.
[26]ພວກເຂົາໄດ້ນໍາເອົາຂອງຂວັນຊຶ່ງຢູ່ໃນມືຂອງພວກເຂົາເຂົ້າມາໃນບ້ານ, ແລະໂຄ້ງຄໍານັບລົງເຖິງພື້ນຕໍ່ຫນ້າເພິ່ນ.[27]ເພິ່ນໄດ້ຖາມພວກເຂົາເຖິງ
ຄວາມເປັນຢູ່ຂອງພວກເຂົາ ແລະໄດ້ເວົ້າວ່າ,"ພໍ່ຂອງພວກເຈົ້າ, ຄົນແກ່ທີ່ພວກເຈົ້າໄດ້ເວົ້າເຖິງນັ້ນສະບາຍດີບໍ? ເພິ່ນຍັງມີຊີວິດຢູ່ ແລະສະບາຍດີ
ບໍ?"
[28]ພວກເຂົາໄດ້ຕອບວ່າ, "ພໍ່ຂອງພວກຂ້ານ້ອຍຜູ້ຮັບໃຊ້ຂອງທ່ານສະບາຍດີ. ເພິ່ນຍັງມີຊີວິດຢູ່." ພວກເຂົາໄດ້ກົ້ມ ແລະ ຫມອບຂາບລົງ.[29]ເມື່ອເ
ພິ່ນໄດ້ຫລຽວຂຶ້ນເພິ່ນໄດ້ເຫັນເບັນຢາມິນນ້ອງຊາຍຂອງເພິ່ນ, ລູກຊາຍຂອງແມ່ຂອງເພິ່ນ ແລະ ເພິ່ນໄດ້ເວົ້າວ່າ, "ນີ້ຄືນ້ອງຊາຍຫລ້າຂອງ
ພວກເຈົ້າທີ່ພວກເຈົ້າໄດ້ບອກເຮົາບໍ? ຈາກນັ້ນເພິ່ນໄດ້ເວົ້າວ່າ, "ລູກຊາຍຂອງເຮົາເອີຍ?" "ຂໍພຣະເຈົ້າຊົງພຣະເມດຕາ, ແກ່ເຈົ້າ."
[30]ເພາະວ່າເພິ່ນໄດ້ມີຄວາມຮູ້ສຶກສະເທືອນໃຈກ່ຽວກັບນ້ອງຊາຍຂອງຕົນ, ເພິ່ນໄດ້ຫາທີ່ໆຈະຮ້ອງໄຫ້. ເພິ່ນຈຶ່ງເຂົ້າໄປໃນຫ້ອງຂອງເພິ່ນ ແ
ລະຮ້ອງໄຫ້ທີ່ນັ້ນ.[31]ເພິ່ນໄດ້ລ້າງຫນ້າຂອງເພິ່ນແລ້ວອອກມາ. ເພິ່ນໄດ້ລະງັບຈິດໃຈຕົວເອງ, ເວົ້າວ່າ, "ຈົ່ງຍົກອາຫານມາ."
[32]ພວກຄົນຮັບໃຊ້ຈຶ່ງໄດ້ຍົກອາຫານມາໃຫ້ໂຢເຊັບໂດຍສ່ວນຂອງເພິ່ນເອງ ແລະຂອງພວກອ້າຍນ້ອງໂດຍສ່ວນຂອງພວກເຂົາເອງ. ພວກຄົນອີຢິບ
ທີ່ນັ້ນໄດ້ກິນກັບເຂົາໃນສ່ວນຂອງພວກເຂົາ ເພາະວ່າຄົນອີຢິບ ບໍ່ສາມາດກິນເຂົ້າຈີ່ກັບຊາວເຮັບເຣີ,
ເພາະວ່າມັນເປັນສິ່ງທີ່ຫນ້າກຽດແກ່ຄົນອີຢິບ.[33]ພວກອ້າຍໄດ້ນັ່ງຕໍ່ຫນ້າເພິ່ນ, ລູກຊາຍຫົວປີຕາມສິດທິລູກຫົວປີ,
ແລະນ້ອງຄົນສຸດທ້ອງຕາມອາຍຸຂອງເຂົາ. ພວກຜູ້ຊາຍທັງຫລາຍຖືກເຮັດໃຫ້ປະຫລາດໃຈດ້ວຍກັນ.[34]ໂຢເຊັບ
ໄດ້ໃຫ້ສ່ວນຕ່າງໆແກ່ພວກເຂົາຈາກອາຫານທີ່ຢູ່ຕໍ່ຫນ້າຂອງເພິ່ນ. ແຕ່ສ່ວນຂອງເບັນຢາມິນໄດ້ຮັບຫລາຍກວ່າຫ້າເທົ່າ. ຂອງພວກອ້າຍຂອງເຂົາ
ພວກເຂົາໄດ້ດື່ມ ແລະສະນຸກສະຫນານກັບເພິ່ນ.


generated on Tue Jun 17 19:01:42 2025

44 1ໂຢເຊັບໄດ້ສັ່ງຄົນຕົ້ນເຮືອນຂອງເພິ່ນ, ເວົ້າວ່າ, "ໃສ່ອາຫານໃຫ້ເຕັມກະສອບທັງຫລາຍຂອງພວກຜູ້ຊາຍໃຫ້ຫລາຍ, ເທົ່າທີ່ພວກເຂົາ
ສາມາດບັນທຸກໄປໄດ້, ແລະໃສ່ເງິນຂອງພວກເຂົາແຕ່ລະຄົນໃນປາກກະສອບຂອງເຂົາ.2ໃສ່ຂອງເຮົາຈອກເງິນ, ໃນປາກກະສອບຂອງ
ຄົນສຸດທ້ອງພ້ອມ, ກັບເງິນຂອງເຂົາທີ່ນຳມາຊື້ເຂົ້າ." ຄົນຕົ້ນເຮືອນກໍໄດ້ເຮັດຕາມທີ່ໂຢເຊັບໄດ້ສັ່ງ.

3ເມື່ອຮຸ່ງເຊົ້າຂຶ້ນມາ, ພວກຜູ້ຊາຍກໍໄດ້ອອກເດີນທາງ, ພວກເຂົາພ້ອມ ແລະລໍທັງຫລາຍຂອງພວກເຂົາ.4ເມື່ອພວກເຂົາໄດ້ອອກໄປຈາກເມືອງ
ແຕ່ຍັງບໍ່ໄກ, ໂຢເຊັບໄດ້ສັ່ງຄົນຕົ້ນເຮືອນຂອງເຂົາ, "ຈົ່ງລຸກຂຶ້ນ, ຕິດຕາມພວກຜູ້ຊາຍນັ້ນໄປ, ແລະ ເມື່ອເຈົ້າໄປທັນພວກເຂົາ, ເຈົ້າຈົ່ງເວົ້າກັບ
ພວກເຂົາວ່າ, "ເປັນຫຍັງພວກເຈົ້າຕອບແທນການດີດ້ວຍຄວາມຊົ່ວ?5ນີ້ບໍ່ແມ່ນຈອກທີ່ເຈົ້ານາຍຂອງເຮົາໃຊ້ດື່ມ, ແລະຈອກທີ່ທ່ານໃຊ້ການ
ທຳນວາຍບໍ? ພວກເຈົ້າໄດ້ເຮັດສິ່ງຊົ່ວຮ້າຍຄືສິ່ງນີ້ທີ່ພວກເຈົ້າໄດ້ເຮັດ.""
6ຄົນຮັບໃຊ້ໃນເຮືອນຂອງໂຢເຊັບໄດ້ຕາມມາທັນພວກເຂົາ ແລະ ໄດ້ເວົ້າຖ້ອຍຄຳເຫລົ່ານີ້ກັບພວກເຂົາ.7ພວກເຂົາໄດ້ເວົ້າກັບລາວວ່າ,
"ເປັນຫຍັງເຈົ້ານາຍຂອງຂ້ານ້ອຍເວົ້າຖ້ອຍຄຳເຫລົ່ານີ້? ຂໍໃຫ້ມັນຢູ່ຫ່າງໄກຈາກພວກຄົນຮັບໃຊ້ຂອງທ່ານທີ່ພວກເຂົາຈະກະທຳຢ່າງນັ້ນ.
8ເບິ່ງເຖີດ, ເງິນທີ່ພວກເຮົາໄດ້ພົບໃນກະສອບທັງຫລາຍຂອງພວກເຮົາໃນການເປີດກະສອບພວກເຮົາ,
ກໍໄດ້ນຳມັນອອກມາຈາກດິນແດນການາອານກັບມາໃຫ້ທ່ານອີກຄັ້ງ. ຈະເປັນໄປໄດ້ຢ່າງໃດທີ່ພວກເຮົາຈະລັກເງິນ ຫລືຄຳຈາກບ້ານເຈົ້ານາຍ
ຂອງທ່ານ?9ບໍ່ວ່າທ່ານຈະພົບທີ່ພວກຄົນຮັບໃຊ້ຂອງທ່ານຄົນໃດ, ຈົ່ງໃຫ້ເຂົາຄົນນັ້ນຕາຍເທາະ, ແລະ ພວກເຮົາກໍຈະເປັນທາດ
ຂອງເຈົ້ານາຍຂອງຂ້ານ້ອຍດ້ວຍ."10ຄົນຕົ້ນເຮືອນນັ້ນໄດ້ເວົ້າວ່າ, "ບັດນີ້ໃຫ້ເປັນໄປຕາມທີ່ຄຳເວົ້າຂອງພວກເຈົ້າເຖີດ. ພົບຈອກທີ່
ຜູ້ໃດກໍຕາມກໍໃຫ້ຄົນນັ້ນເປັນທາດຂອງເຮົາ ແລະ ພວກທ່ານທີ່ເຫລືອກໍພົ້ນຜິດ."
11ຈາກນັ້ນຜູ້ຊາຍແຕ່ລະຄົນໄດ້ຟ້າວ ແລະ ຍົກເອົາກະສອບຂອງຕົນວາງລົງເທິງດິນ, ແລ້ວແຕ່ລະຄົນໄດ້ເປີດກະສອບຂອງຕົນອອກ.12ຄົນ
ຕົ້ນເຮືອນໄດ້ເລີ່ມຄົ້ນຫາ. ເຂົາໄດ້ເລີ່ມຕົ້ນຈາກຜູ້ທີ່ມີອາຍຸຫລາຍທີ່ສຸດ ແລະ ໄປຈົບທີ່ຜູ້ມີອາຍຸນ້ອຍທີ່ສຸດ, ແລະ ຈອກນັ້ນກໍຖືກພົບໃນກະສອບ
ຂອງເບັນຢາມິນ.13ດັ່ງນັ້ນພວກເຂົາຈຶ່ງໄດ້ຈີກເສື້ອຜ້າຂອງພວກເຂົາ. ຜູ້ຊາຍແຕ່ລະຄົນໄດ້ເອົາກະສອບບັນທຸກຂຶ້ນຫລັງລໍຂອງເຂົາ ແລະ ກັບເຂົ້າ
ເມືອງ.
14ເມື່ອຢູດາ ແລະອ້າຍນ້ອງຂອງລາວໄດ້ມາຮອດເຮືອນຂອງໂຢເຊັບ. ເພິ່ນຍັງຢູ່ທີ່ນັ້ນ, ແລະພວກເຂົາໄດ້ພາກັນກົ້ມຂາບລົງຕໍ່ຫນ້າເພິ່ນເຖິງພື້ນ.
15ໂຢເຊັບໄດ້ກ່າວກັບພວກເຂົາວ່າ,"ພວກເຈົ້າໄດ້ເຮັດຫຍັງລົງໄປ? ພວກເຈົ້າບໍ່ຮູ້ບໍ່ວ່າຄົນເຊັ່ນເຮົານີ້ທຳນວາຍໄດ້?"
16ຢູດາເວົ້າວ່າ, "ເຈົ້ານາຍຂອງຂ້ານ້ອຍພວກເຮົາຈະສາມາດເວົ້າຢ່າງໃດໄດ້ອີກ? ຫລືວ່າພວກເຮົາຈະພິສູດຕົວເຮົາເອງໄດ້ຢ່າງໃດ? ພຣະເຈົ້າໄດ້
ພົບຄວາມຊົ່ວຮ້າຍຂອງພວກຄົນຮັບໃຊ້ຂອງທ່ານ. ບັດນີ້, ພວກເຮົາເປັນທາດຂອງເຈົ້ານາຍທ່ານຂອງຂ້ານ້ອຍ, ທັງພວກເຮົາ ແລະ ເຂົາຜູ້ທີ່ທ່ານ
ໄດ້ພົບຈອກຢູ່ໃນມືຂອງເຂົາ."17ໂຢເຊັບໄດ້ເວົ້າວ່າ, "ຂໍໃຫ້ມັນຢູ່ຫ່າງໄກຈາກເຮົາ! ທີ່ຈະເຮັດຢ່າງນັ້ນ. ຜູ້ຊາຍຄົນນັ້ນຜູ້ທີ່ໄດ້ພົບຈອກ
ຢູ່ໃນມືຂອງເຂົາ, ຄົນນັ້ນ ຈະເປັນທາດຂອງເຮົາ, ແຕ່ສຳລັບພວກເຈົ້າທັງຫລາຍທີ່ເຫລືອ, ຈົ່ງລຸກຂຶ້ນກັບເມືອຫາພໍ່ຂອງພວກເຈົ້າຢ່າງສັນຕິເຖີດ."
18ຈາກນັ້ນຢູດາໄດ້ເຂົ້າມາໃກ້ເພິ່ນ ແລະ ໄດ້ເວົ້າວ່າ, "ຂໍຄວາມກະລຸນາເຖີດ, ເຈົ້ານາຍຂອງຂ້ານ້ອຍ ຂໍໃຫ້ຄົນຮັບໃຊ້ຂອງທ່ານເວົ້າຈັກຄຳໃຫ້
ທ່ານຟັງ, ແລະ ໃຫ້ຄວາມຮ້າຍຂອງທ່ານຕົກຢູ່ກັບຄົນຮັບໃຊ້ຂອງທ່ານ, ເພາະທ່ານເປັນເຫມືອນຟາໂຣ.19ເຈົ້ານາຍຂອງຂ້ານ້ອຍໄດ້ຖາມ
ຄົນຮັບໃຊ້ຂອງເຂົາກ່າວວ່າ, "ເຈົ້າມີພໍ່ ແລະ ນ້ອງຊາຍຫລືບໍ່?"
20ພວກຂ້ານ້ອຍໄດ້ຕອບວ່າ, "ພວກຂ້ານ້ອຍມີພໍ່ທີ່ເຖົ້າແກ່ຫລາຍ, ແລະ ຍັງມີນ້ອງຊາຍຜູ້ຫນຶ່ງ, ທີ່ເກີດເມື່ອເພິ່ນເຖົ້າແກ່ແລ້ວ. ອ້າຍຂອງເດັກຜູ້ນີ້
ໄດ້ຕາຍໄປແລ້ວ, ແລະ ລາວຜູ້ດຽວເທົ່ານັ້ນທີ່ເກີດຮ່ວມທ້ອງແມ່ດຽວກັນ ທີ່ຍັງມີຊີວິດຢູ່, ແລະ ພໍ່ຂອງລາວຈຶ່ງຮັກລາວ
ຫລາຍ."21ຈາກນັ້ນທ່ານໄດ້ເວົ້າກັບພວກຄົນຮັບໃຊ້ຂອງທ່ານ, "ຈົ່ງນຳເຂົາລົງມາຫາເຮົາເພື່ອທີ່ເຮົາຈະພົບເຂົາ."22ຫລັງຈາກນັ້ນ, ເຮົາໄດ້ເວົ້າກັບ
ເຈົ້ານາຍຂອງເຮົາ, "ເດັກຄົນນັ້ນບໍ່ສາມາດຈາກພໍ່ຂອງລາວມາບໍ່ໄດ້. ເພາະວ່າຖ້າເຂົາປະຖິ້ມພໍ່ຂອງເຂົາ ພໍ່ຂອງເຂົາຕ້ອງຕາຍ."
23ຈາກນັ້ນທ່ານໄດ້ເວົ້າກັບຄົນຮັບໃຊ້ຂອງທ່ານວ່າ, "ຖ້ານ້ອງຊາຍຄົນສຸດທ້ອງບໍ່ລົງມາກັບພວກເຈົ້າ,
ພວກເຈົ້າຈະບໍ່ໄດ້ພົບຫນ້າເຮົາອີກ."24ແລະເມື່ອເຫດການໄດ້ເກີດຂຶ້ນພວກຂ້ານ້ອຍໄດ້ຂຶ້ນໄປພົບພໍ່, ຂອງຂ້ານ້ອຍຄົນຮັບໃຊ້ຂອງທ່ານ
ພວກເຮົາໄດ້ບອກເຂົາເຖິງຖ້ອຍຄຳຂອງເຈົ້ານາຍຂອງຂ້ານ້ອຍ.25ພໍ່ຂອງພວກເຮົາໄດ້ເວົ້າວ່າ, "ຈົ່ງໄປອີກຄັ້ງ, ຊື້ອາຫານໃຫ້ເຮົາ."26ຈາກນັ້ນພວກ
ຂ້ານ້ອຍຈຶ່ງຕອບເພິ່ນວ່າ, "ພວກເຮົາບໍ່ສາມາດໄປໄດ້. ຖ້ານ້ອງຄົນສຸດທ້ອງຂອງພວກເຮົາບໍ່ໄປກັບເຮົາ, ຈາກນັ້ນ ພວກເຮົາຈະລົງໄປ
ເພາະພວກເຮົາຈະບໍ່ສາມາດພົບຫນ້າຜູ້ຊາຍຄົນນັ້ນໄດ້ ນອກຈາກນ້ອງຊາຍຄົນສຸດທ້ອງຈະໄປກັບເຮົາ.'
27ພໍ່ຂອງພວກຂ້ານ້ອຍ, ຄົນຮັບໃຊ້ຂອງທ່ານໄດ້ເວົ້າກັບພວກເຮົາວ່າ, "ພວກເຈົ້າຮູ້ວ່າ ເມຍຂອງເຮົາ ໄດ້ເກີດລູກຊາຍສອງຄົນແກ່ເຮົາ.28ຄົນທີ
ຫນຶ່ງໃນພວກເຂົາໄດ້ໄປຈາກເຮົາແລະເຮົາໄດ້ເວົ້າວ່າ. "ແນ່ນອນເຂົາໄດ້ຖືກຈີກເປັນຕ່ອນໆ, ເພາະຂ້ອຍບໍ່ໄດ້ເຫັນລາວນັບຕັ້ງແຕ່
ນັ້ນມາ."29ບັດນີ້ຖ້າພວກເຈົ້ານຳຄົນນີ້ໄປຈາກເຮົາອີກ, ແລະເກີດອັນຕະລາຍກັບເຂົາ, ພວກເຈົ້າຈະນຳຜົມຫງອກຂອງເຮົາກັບຄວາມໂສກເສົ້າລົງ
ສູ່ແດນຄົນຕາຍ.""
30ຢູດາໄດ້ເວົ້າຕໍ່ໄປວ່າ, "ທ່ານເອີຍ ຖ້າຂ້ານ້ອຍກັບເມືອຫາພໍ່, ໂດຍບໍ່ມີນ້ອງຄົນນີ້ກັບເມືອນຳແລ້ວ
ພໍ່ພໍ່ເຫັນວ່າບໍ່ມີລາວມານຳເພິ່ນກໍຈະທໍຣະມານຕາຍ ແລະມັນກໍໄດເກີດຂຶ້ນ, ເມື່ອເຂົາເຫັນເດັກນັ້ນບໍ່ຢູ່ກັບພວກເຮົາ ເພິ່ນຈະຕາຍ.
31ພວກຄົນຮັບໃຊ້ຂອງທ່ານ, ຈະນຳຜົມຫງອກຂອງພໍ່ຂອງພວກເຮົາ. ຄົນຮັບໃຊ້ຂອງທ່ານກັບຄວາມໂສກເສົ້າລົງສູ່ແດນຄົນຕາຍ.
32ເພາະຄົນຮັບໃຊ້ຂອງທ່ານໄດ້ເປັນຄົນປະກັນສຳລັບເດັກນັ້ນກັບພໍ່ຂອງຂ້ານ້ອຍ, ແລະໄດ້ບອກເພິ່ນວ່າ, "ຖ້າຂ້ານ້ອຍບໍ່ໄດ້ນຳເຂົາກັບມາ
ໃຫ້ເພິ່ນ, ຈາກນັ້ນຂ້ານ້ອຍກໍຈະຍອມຮັບຜິດຕໍ່ພໍ່ຂອງຂ້ານ້ອຍຕະຫລອດໄປ."
33ດັ່ງນັ້ນບັດນີ້, ຂໍກະລຸນາໃຫ້ຄົນຮັບໃຊ້ຂອງທ່ານຢູ່ເປັນທາດກັບເຈົ້ານາຍຂອງຂ້ານ້ອຍແທນເດັກຄົນນັ້ນ, ແລະອະນຸຍາດໃຫ້ເດັກນັ້ນກັບຂຶ້ນໄປ
ກັບພວກອ້າຍຂອງເຂົາ.34ເພາະຂ້ານ້ອຍຈະກັບໄປພົບພໍ່ຂອງຂ້ານ້ອຍໄດ້ຢ່າງໃດ ຖ້າເດັກນັ້ນບໍ່ຢູ່ກັບຂ້ານ້ອຍ? ຂ້ານ້ອຍ
ເກງວ່າຈະເຫັນຄວາມຊົ່ວຮ້າຍມາສູ່ພໍ່ຂອງຂ້ານ້ອຍ."

45 1ແລ້ວໂຢເຊັບກໍບໍ່ສາມາດບັງຄັບຕົວເອງເອົາໄວ້ໄດ້ຕໍ່ຫນ້າຄົນຮັບໃຊ້ທີ່ຢືນກັບລາວ. ລາວຈຶ່ງເວົ້າຢ່າງດັງວ່າ, "ທຸກຄົນຕ້ອງຈາກເຮົາໄປ."
ສະນັ້ນບໍ່ມີໃຜເລີຍທີ່ຢືນຢູ່ກັບໂຢເຊັບ ລາວບອກພວກອ້າຍນ້ອງຂອງຕົນວ່າ ລາວແມ່ນໃຜນັ້ນ.
2ລາວໄດ້ໄຫ້ສະອື້ນສຽງດັງ, ຈົນຊາວອີຢິບ
ໄດ້ຍິນ, ແລະ ຂ່າວຈຶ່ງແຜ່ໄປເຖິງຣາຊວັງຂອງຟາໂຣ.
3ໂຢເຊັບໄດ້ກ່າວແກ່ພວກອ້າຍນ້ອງຂອງຕົນວ່າ, "ຂ້ອຍແມ່ນໂຢເຊັບເອງ. ພໍ່ຂອງຂ້ອຍຍັງມີ
ຊີວິດຢູ່ບໍ?" ແຕ່ພໍເມື່ອໄດ້ຍິນເຊັ່ນນັ້ນ ພວກອ້າຍນ້ອງຂອງໂຢເຊັບບໍ່ສາມາດຕອບລາວໄດ້,
ເພາະພວກເຂົາຕົກໃຈທີ່ສຸດໃນການມີຊີວິດຢູ່ຂອງລາວ.

4ແລ້ວໂຢເຊັບກໍເວົ້າຕໍ່ໄປວ່າ, "ກະຣຸນາຫຍັບເຂົ້າມາໃກ້ໆຂ້ອຍເຖີ້ນ." ພວກເຂົາຈຶ່ງຫຍັບເຂົ້າ. ລາວໄດ້ເວົ້າອີກວ່າ, "ຂ້ອຍແມ່ນໂຢເຊັບ,
ນ້ອງຊາຍຂອງພວກເຈົ້າ ຜູ້ທີ່ພວກເຈົ້າໄດ້ຖືກຂາຍມາທີ່ປະເທດອີຢິບ.
5ຢ່າທຸກໃຈ ຫລື ໃຈຮ້າຍໃຫ້ຕົວພວກເຈົ້າເອງເລີຍທີ່ໄດ້ຂາຍຂ້ອຍມາທີ່ນີ້,
ເພາະພຣະເຈົ້າໄດ້ສົ່ງຂ້ອຍມານີ້ກ່ອນພວກເຈົ້າ ເພື່ອຊ່ວຍຊີວິດຄົນ.
6ສອງປີແລ້ວທີ່ການອຶດຢາກໄດ້ມາທີ່ດິນແດນແຫ່ງນີ້, ແລະ ຈະມີອີກຫ້າປີ
ຊຶ່ງຈະບໍ່ມີການປູກຝັງ ແລະ ການເກັບກ່ຽວເລີຍ.
7ພຣະເຈົ້າໄດ້ສົ່ງຂ້ອຍມາກ່ອນພວກເຈົ້າ ເພື່ອຊ່ວຍຊີວິດຂອງພວກເຈົ້າ ດັ່ງຄົນທີ່ຍັງເຫລືອໄວ້ໃນໂລກນີ້, ແລະ ເພື່ອຮັກສາໃຫ້ພວກເຈົ້າຈະມີຊີວິດ
ຢູ່ດ້ວຍການປົດປ່ອຍທີ່ຍິ່ງໃຫຍ່.
8ດັ່ງນັ້ນບັດນີ້ ມັນຈຶ່ງບໍ່ແມ່ນພວກເຈົ້າທີ່ໄດ້ສົ່ງຂ້ອຍມາທີ່ນີ້ ແຕ່ແມ່ນອົງພຣະຜູ້ເປັນເຈົ້າຕ່າງຫາກທີ່ໄດ້ສົ່ງຂ້ອຍມາ,
ແລະ ພຣະອົງໄດ້ເຮັດໃຫ້ຂ້ອຍເປັນພໍ່ຂອງກະສັດຟາໂຣ, ເປັນຜູ້ຮັບຜິດຊອບປະເທດທັງຫມົດຂອງເພິ່ນ, ແລະ ເປັນຜູ້ປົກຄອງດິນແດນປະເທດ
ອີຢິບທັງຫມົດ.
9ຈົ່ງຟ້າວກັບເມືອ ແລະ ໄປຫາພໍ່ຂອງຂ້ອຍ ແລະ ບອກແກ່ເພິ່ນວ່າ, 'ນີ້ແມ່ນຄຳເວົ້າຂອງໂຢເຊັບລູກຊາຍຂອງເຈົ້າໄດ້ກ່າວວ່າ, "ພຣະເຈົ້າໄດ້
ບັນດານໃຫ້ຂ້ອຍ ເປັນຜູ້ປົກຄອງປະເທດອີຢິບທັງຫມົດ. ຂໍພໍ່ມາຫາຂ້ອຍ, ຢ່າໄດ້ຊັກຊ້າເລີຍ.
10ພໍ່ຈະໄດ້ອາໄສຢູ່ໃນດິນແດນໂກເຊັນ, ແລະ
ພໍ່ຈະຢູ່ໃກ້ຂ້ອຍ, ພໍ່ ແລະ ລູກຫລານຂອງພໍ່, ແລະ ຝູງແກະ ແລະ ຝູງງົວ ແລະ ທຸກໆສິ່ງທີ່ພໍ່ມີຢູ່.
11ຂ້ອຍຈະຈັດຕຽມສຳລັບພໍ່, ເພາະຄວາມ
ອຶດຫິວຍັງຈະມີອີກຫ້າປີ, ສະນັ້ນພໍ່, ຄົວເຮືອນຂອງພໍ່, ແລະ ທຸກສິ່ງທີ່ພໍ່ມີຈະບໍ່ອຶດຢາກລຳບາກ."'
12ເບິ່ງແມ, ຕາຂອງພວກເຈົ້າຈົ່ງແນມເບິ່ງ, ແລະ ຕາຂອງເບັນຈາມິນນ້ອງຊາຍຂອງຂ້ອຍເອີຍ, ນີ້ແມ່ນປາກຂອງຂ້ອຍເອງທີ່ເວົ້າກ່າວຕໍ່ພວກເຈົ້າ.
13ເຈົ້າຈົ່ງເລົ່າໃຫ້ພໍ່ຂອງຂ້ອຍຟັງເທີດ ເຖິງກຽດສັກສີທັງຫມົດທີ່ຂ້ອຍມີໃນປະເທດອີຢິບນີ້ ແລະ ໃນທຸກໆສິ່ງທີ່ພວກເຈົ້າໄດ້ເຫັນ. ເຈົ້າຈົ່ງຟ້າວໄປ
ແລະ ພາພໍ່ຂອງຂ້ອຍມາຢູ່ທີ່ນີ້."
14ລາວໄດ້ກອດຄໍເບັນຢາມິນນ້ອງຊາຍຂອງລາວພ້ອມທັງຮ້ອງໄຫ້, ແລະ ເບັນຢາມິນກໍໄດ້ຮ້ອງໄຫ້ເທິງຄໍຂອງລາວ.
15ລາວໄດ້ຈູບພວກອ້າຍທຸກໆ
ຄົນ ແລະ ຮ້ອງໄຫ້ໃສ່ພວກເຂົາ. ຫລັງຈາກນັ້ນອ້າຍນ້ອງລາວກໍໄດ້ລົມກັບລາວ.
16ເມື່ອຂ່າວໄດ້ແຜ່ໄປເຖິງຣາຊວັງຂອງຟາໂຣວ່າ: "ບັນດາອ້າຍ ແລະ ນ້ອງຂອງໂຢເຊັບໄດ້ມາ."  ກະສັດຟາໂຣ ແລະ ບັນດາຂ້າຣາຊການ
ຂອງພະອົງຕ່າງກໍມີຄວາມຍິນດີເປັນຢ່າງຫລາຍ.
17ຟາໂຣໄດ້ກ່າວຕໍ່ໂຢເຊັບວ່າ, "ຈົ່ງບອກໃຫ້ພວກອ້າຍນ້ອງຂອງເຈົ້າ, ເຮັດສິ່ງນີ້: ເກັບເອົາ
ສັດຂອງເຈົ້າ ແລະ ໄປທີ່ການາອານ.
18ໃຫ້ໄປເອົາພໍ່ ແລະ ຄອບຄົວຂອງພວກເຈົ້າກັບມາຫາເຮົາທີ່ນີ້. ເຮົາຈະມອບທີ່ດິນທີ່ດີໃນ
ດິນແດນແຫ່ງປະເທດເອຢິບໃຫ້ພວກເຈົ້າ, ແລະ ພວກເຈົ້າຈະມີຢູ່ມີກິນຈົນອີ່ມຫນຳສຳລານໃນແຜ່ນດິນນີ້.'
19ບັດນີ້ພວກເຈົ້າໄດ້ຖືກສັ່ງວ່າ, 'ໃຫ້ເຮັດສິ່ງນີ້, ໃຫ້ເອົາກວຽນອອກຈາກອີຢິບໄປ ເພື່ອໄປຂົນເອົາລູກຫລານຂອງພວກເຈົ້າ ແລະ
ເມຍຂອງພວກເຈົ້າ ແລະ ພໍ່ຂອງພວກເຈົ້າ ແລ້ວ ກັບຄືນມາພີ້.
20ຢ່າພາກັນເປັນຫ່ວງຊັບສິ່ງຂອງ ຂອງພວກເຈົ້ານັ້ນ, ເພາະສິ່ງດີທີ່ສຸດຢູ່ໃນປະເທດ
ອີຢິບທັງຫມົດ ຈະເປັນຂອງພວກເຈົ້າ.'"
21ເຫລົ່າລູກຊາຍຂອງອິສະຣາເອນກໍປະຕິບັດຕາມຄຳສັ່ງນັ້ນ. ໂຢເຊັບໄດ້ເອົາກວຽນຫລາຍຄັນໃຫ້ພວກເຂົາ, ຕາມຄຳສັ່ງຂອງກະສັດຟາໂຣ,
ແລະ ໄດ້ເອົາອາຫານໃຫ້ພວກເຂົາຖືໄປກິນຕາມທາງ.
22ພວກເຂົາແຕ່ລະຄົນ ໄດ້ຮັບເຄື່ອງນຸ່ງໃຫມ່ຜູ້ລະຊຸດ, ແຕ່ເບັນຢາມິນນັ້ນ ເພິ່ນໄດ້ເອົາເງິນ
ສາມຮ້ອຍຫລຽນ ແລະ ເຄື່ອງນຸ່ງໃຫມ່ໃຫ້ເຂົາເປັນພິເສດຫ້າຊຸດ.
23ສຳລັບພໍ່ຂອງເພິ່ນແລ້ວເພິ່ນໄດ້ສົ່ງສິ່ງນີ້ໃຫ້ຄື: ລໍສິບໂຕທີ່ຕາງສິ່ງທີ່ດີຂອງ
ປະເທດອີຢິບ; ແລະ ມີລໍແມ່ອີກສິບໂຕຕາງເຂົ້າສານ, ເຂົ້າຈີ່, ແລະ ສິ່ງໆອື່ນໆອີກ ສຳລັບພໍ່ຂອງຕົນເພື່ອໃນການເດີນທາງ.
24ດັ່ງນັ້ນລາວໄດ້ສົ່ງພວກອ້າຍນ້ອງຂອງຕົນອອກເດີນທາງໄປ. ລາວໄດ້ເວົ້າກັບພວກເຂົາວ່າ, "ເບິ່ງເດີ ພວກເຈົ້າຢ່າໄດ້ຜິດຖຽງກັນ ໃນເວລາ
ເດີນທາງກັບ."
25ພວກເຂົາໄດ້ອອກເດີນທາງອອກຈາກອີຢິບ ແລະ ໄດ້ມາເຖິງດິນແດນການາອານ, ໄປຫາຢາໂຄບພໍ່ຂອງພວກເຂົາ.
26ພວກເຂົາຈຶ່ງ
ຟ້າວບອກພໍ່ວ່າ, "ໂຢເຊັບຍັງມີຊີວິດຢູ່! ແລະ ລາວກໍເປັນຜູ້ປົກຄອງປະເທດອີຢິບທັງຫມົດ." ຫົວໃຈຂອງຢາໂຄບກໍ
ເຕັມດ້ວຍຄວາມປະຫລາດໃຈ, ເພາະເພິ່ນບໍ່ອາດເຊື່ອຄຳເວົ້າຂອງພວກເຂົາໄດ້.
27ພວກເຂົາກໍໄດ້ເລົ່າຄຳເວົ້າທັງຫມົດຂອງໂຢເຊັບໄດ້ເວົ້າກັບພວກເຂົາສູ່ເພິ່ນຟັງ. ເມື່ອຢາໂຄບໄດ້ເຫັນກວຽນທີ່ໂຢເຊັບໄດ້ສົ່ງມາຮັບເພິ່ນນັ້ນ,
ຈິດວິນຍານຂອງຢາໂຄບພໍ່ຂອງພວກເຂົາກໍຟື້ນຟູຂຶ້ນມາອີກ.
28ອິສະຣາເອນໄດ້ເວົ້າວ່າ, "ພຽງພໍແລ້ວ! ໂຢເຊັບລູກຊາຍຂອງເຮົາຍັງມີຊີວິດຢູ່.
ຂ້ອຍຈະໄປ ແລະ ພົບລາວ ກ່ອນທີ່ຂ້ອຍຈະຕາຍ."


generated on Tue Jun 17 19:01:42 2025

# 46

1ອິສະຣາເອນໄດ້ມ້ຽນເອົາສິ່ງຂອງທັງຫມົດທີ່ເພິ່ນມີ ແລະ ໄດ້ໄປທີ່ເມືອງເບເອນເຊບາ. ບ່ອນທີ່ເພິ່ນໄດ້ຖວາຍບູຊາແກ່ພຣະເຈົ້າຂອງອິຊາກ
ພໍ່ຂອງເພິ່ນ.2ພຣະເຈົ້າໄດ້ເວົ້າກັບຢາໂຄບທາງຄວາມຝັນໃນຄືນນັ້ນວ່າ, "ຢາໂຄບ, ຢາໂຄບເອີຍ." ເພິ່ນກ່າວວ່າ, "ໂດຍ ຂ້ານ້ອຍ
ຢູ່ທີ່ນີ້,"3ພຣະອົງກ່າວວ່າ, "ເຮົາຄືພຣະເຈົ້າ, ພຣະເຈົ້າຂອງພໍ່ເຈົ້າ. ບໍ່ຕ້ອງຢ້ານທີ່ຈະລົງໄປປະເທດອີຢິບ, ຢູ່ໃນທີ່ນັ້ນເຮົາຈະເຮັດໃຫ້ເຈົ້າເປັນ
ຊົນຊາດໃຫຍ່.4ເຮົາຈະໄປປະເທດອີຢິບກັບເຈົ້າ, ແລະ ເຮົາຈະນຳເອົາເຈົ້າ ກັບຄືນມາສູ່ດິນແດນນີ້ອີກ ແລະ ໂຢເຊັບຈະ
ປິດຕາເຈົ້າດ້ວຍມືຂອງລາວເອງ."

5ຢາໂຄບກໍລຸກຂຶ້ນຈາກເມືອງເບເອນເຊບາ. ພວກລູກຊາຍຂອງອິສະຣາເອນໄດ້ເອົາພໍ່ຂອງພວກເຂົາ, ພວກເດັກນ້ອຍ, ແລະ ເມຍຂອງພວກເຂົາ,
ຂຶ້ນຂີກວຽນທີ່ຟາໂຣໄດ້ສົ່ງມາຮັບເພິ່ນ.6ພວກເຂົາເອົາຝູງສັດກັບຊັບສົມບັດທັງຫມົດທີ່ມີໃນການາອານ ອອກເດີນທາງໄປສູ່ປະເທດອີຢິບ.7ຢາໂຄບ
ໄດ້ນຳເອົາເຊື້ອສາຍທັງຫມົດຂອງຕົນໄປນຳດັ່ງນີ້: ບັນດາລູກຊາຍຂອງເພິ່ນ, ບັນດາຫລານຊາຍຂອງເພິ່ນ, ບັນດາລູກສາວຂອງເພິ່ນ ແລະບັນດາ
ຫລານສາວຂອງເພິ່ນ.
8ເຊື້ອສາຍຂອງຢາໂຄບທີ່ໄປປະເທດອີຢິບ, ກັບເພິ່ນມີຣູເບັນລູກຊາຍກົກຂອງເພິ່ນ9ແລະພວກລູກຊາຍຂອງຣູເບັນດັ່ງນີ້: ຮານົກ, ປານລູ,
ເຮຊະໂຣນ, ແລະການໝີ.10ຊີເມໂອນ ແລະພວກລູກຊາຍຂອງຕົນ: ເຢມູເອນ, ຢາມິນ, ໂອຮາດ, ຢາກິນ, ໂຊຮາ, ແລະລູກທີ່ເກີດຈາກຍິງຊາວ
ການາອານຊື່ວ່າ ຊາອູນ.11ເລວີ ແລະລູກຊາຍຂອງຕົນ: ເກໂຊນ, ໂກຮາດ, ແລະເມຣາຣີ.
12ຢູດາ ແລະພວກລູກຊາຍຂອງຕົນ: ເອຣະ, ໂອນານ, ເຊລາ, ເປເຣັດ, ແລະເຊຣາ. (ສ່ວນເອຣະກັບໂອນານ ລູກຊາຍສອງຄົນຂອງຢູດານັ້ນ
ຕາຍທີ່ການາອານ). ພ້ອມດ້ວຍລູກຊາຍຂອງເປເຣັດຊື່ວ່າ ເຮຊະໂຣນ, ແລະຮາມູນ.13ອິດຊາຄາກັບພວກລູກຊາຍຂອງຕົນ: ໂຕລາ, ປູອາ,
ຢາຊຸບ, ແລະຊິມໂຣນ.14ເຊບູໂລນກັບພວກລູກຊາຍຂອງຕົນ: ເສເຣັດ, ເອໂລນ ແລະຢາເລເອນ.15ຄົນເຫລົ່ານັ້ນແມ່ນລູກຊາຍຂອງນາງເລອາ ທີ່
ໄດ້ເກີດໃຫ້ຢາໂຄບໃນເມໂຊໂປຕາເມຍ ລວມທັງນາງດີນາລູກສາວຂອງຕົນດ້ວຍ. ເມື່ອນັບລວມທັງຫມົດແລ້ວ ເຊື້ອສາຍທີ່ສືບມາຈາກນາງເລອາ
ມີຢູ່ 33 ຄົນ.
16ກາດ ແລະບັນດາລູກຊາຍຂອງຕົນ: ເຊໂຟນ, ຮັກກີ, ຊູນີ, ເອຊະໂບນ, ເອຣີ, ອາໂຣດ, ແລະອາເຣລີ.17ອາເຊ ແລະພວກລູກຊາຍຂອງຕົນ:
ອີມນາ, ອີຊະວາ, ອີຊະວີ, ເບຣີຢາ, ແລະນາງເສຣາລູກສາວຂອງລາວ ພ້ອມທັງລູກຊາຍຂອງເບຣີຢາ: ເຮເບ, ແລະມັນກີເອນ.18ພວກ 16 ຄົນນີ້
ແມ່ນເຊື້ອສາຍຂອງຢາໂຄບ, ທີ່ສືບມາຈາກນາງຊິລະປາ ເອື້ອຍລ້ຽງທີ່ລາບານໄດ້ມອບໃຫ້ນາງເລອາ ລູກສາວຂອງຕົນ.
19ສ່ວນຣາເຊັນ ເມຍຂອງຢາໂຄບ ມີລູກຊາຍສອງຄົນ: ໂຢເຊັບ ແລະເບັນຢາມິນ.20ຢູ່ໃນປະເທດອີຢິບ ໂຢເຊັບມີລູກຊາຍສອງຄົນຊື່ວ່າ ມານາເຊ
ແລະເອຟຣາອິມ ທີ່ໄດ້ນຳນາງອາເສນາດລູກສາວຂອງໂປຕີເຟຣາປະໂລຫິດແຫ່ງເມືອງເຮລີໂອໂປລີ.21ລູກຊາຍຂອງເບັນຢາມິນ ມີດັ່ງນີ້: ເບລາ,
ເບເຄ, ອັດຊະເບນ, ເກຣາ, ນາອາມານ, ເອຮີ, ໂຣເຊ, ມຸບປິມ, ຮຸບປິມ, ແລະອາກເດ.22ພວກສິບສີ່ຄົນນີ້ເປັນເຊື້ອສາຍຂອງຢາໂຄບ ທີ່ສືບມາ
ຈາກນາງຣາເຊັນ.
23ດານ ແລະ ລູກຊາຍຂອງຕົນຊື່ວ່າຮູຊິມ.24ເນັບທາລີ ແລະລູກຊາຍຂອງຕົນ ມີດັ່ງນີ້: ຢາເຊເອນ, ກູນີ, ເຢເຊ, ແລະ ຊິນເລັມ.25ພວກເຈັດຄົນນີ້
ເປັນເຊື້ອສາຍຂອງຢາໂຄບທີ່ສືບມາຈາກນາງບິນຮາ, ເອື້ອຍລ້ຽງທີ່ລາບານໄດ້ມອບໃຫ້ນາງຣາເຊັນລູກສາວຂອງຕົນ.
26ຈຳນວນເຊື້ອສາຍແທ້ໆທັງຫມົດຂອງຢາໂຄບ,ທີ່ໄປຢູ່ໃນປະເທດອີຢິບມີ 66 ຄົນ; ໂດຍບໍ່ນັບເມຍຂອງພວກລູກຊາຍຂອງເພິ່ນ.27ໂຢເຊັບມີ
ລູກຊາຍທີ່ເກີດຢູ່ໃນປະເທດອີຢິບສອງຄົນ, ເມື່ອຮວບຮວມຄອບຄົວຂອງຢາໂຄບທັງຫມົດ ທີ່ໄປຢູ່ໃນປະເທດອີຢິບແລ້ວມີ 70 ຄົນ.
28ຢາໂຄບໄດ້ສົ່ງຢູດາໄປບອກໂຢເຊັບລ່ວງຫນ້າ ເພື່ອໃຫ້ມາພົບພໍ່ຂອງຕົນທີ່ເຂດໂກເຊັນ. ເມື່ອພວກເຂົາມາຮອດ.29ໂຢເຊັບຈຶ່ງຂີ່ລົດມ້າອອກໄປພົບ
ພໍ່ຂອງຕົນທີ່ເຂດໂກເຊັນທັນທີ. ເມື່ອທັງສອງພົບກັນ ໂຢເຊັບຈຶ່ງຟ້າວກອດຄໍພໍ່ຂອງຕົນໄຫ້ສະອື້ນເປັນເວລານານ.30ຢາໂຄບເວົ້າກັບໂຢເຊັບວ່າ,
"ບັດນີ້ ພໍ່ພ້ອມແລ້ວທີ່ຈະຕາຍ, ເມື່ອໄດ້ເຫັນຫນ້າລູກ, ແລະຮູ້ວ່າລູກຍັງມີຊີວິດຢູ່."
31ແລ້ວໂຢເຊັບກໍກ່າວຕໍ່ພວກອ້າຍ ຕະຫລອດທັງຄອບຄົວທັງຫມົດຂອງພໍ່ຕົນວ່າ, "ຂ້ອຍຕ້ອງໄປບອກໃຫ້ກະສັດຮູ້ວ່າ, ພວກອ້າຍນ້ອງກັບຄອບຄົວ
ທັງຫມົດຂອງພໍ່ຂ້ອຍ, ທີ່ໄດ້ອາໄສຢູ່ໃນການາອານນັ້ນ, ມາຮອດແລ້ວ.32ຂ້ອຍຈະບອກເພິ່ນວ່າ, ພວກເຈົ້າເປັນຄົນລ້ຽງແກະແລະລ້ຽງງົວ. ແລະ
ພວກເຈົ້າໄດ້ເອົາຝູງແກະ, ກັບຝູງງົວພ້ອມທຸກສິ່ງທີ່ມີນັ້ນມານຳ.
33ເມື່ອກະສັດເອີ້ນພວກເຈົ້າໄປຖາມ,ເຖິງວິຊາອາຊີບຂອງພວກເຈົ້າ,34ໃຫ້ພວກເຈົ້າຕອບວ່າ, "ພວກເຈົ້າລ້ຽງສັດເປັນອາຊີບເຫມືອນດັ່ງບັນ
ພະບຸຣຸດຂອງພວກເຮົາ, ໂດຍວິທີນີ້ກະສັດກໍຈະອະນຸຍາດໃຫ້ພວກເຈົ້າອາໄສຢູ່ໃນເຂດໂກເຊັນໄດ້." ໂຢເຊັບແນະນຳເຊັ່ນນີ້, ເພາະຊາວອີຢິບບໍ່
ມັກພວກລ້ຽງແກະ."


generated on Tue Jun 17 19:01:42 2025

47 [1]ດັ່ງນັ້ນ ໂຢເຊັບຈຶ່ງພາອ້າຍຫ້າຄົນຂອງຕົນໄປພົບກະສັດ. ເພິ່ນບອກກະສັດວ່າ, "ພໍ່ ແລະພວກອ້າຍນ້ອງຂອງຂ້ານ້ອຍ, ໄດ້ມາແຕ່
ການາອານແລ້ວ, ພ້ອມກັບຝູງແກະ ແລະຝູງງົວ ຕະຫລອດທັງທຸກສິ່ງທີ່ພວກເຂົາມີຢູ່. ດຽວນີ້,ພວກເຂົາເຈົ້າອາໄສຢູ່ເຂດໂກເຊັນ."[2]ແລ້ວ
ໂຢເຊັບກໍແນະນຳພວກອ້າຍຂອງຕົນຕໍ່ກະສັດ.

[3]ກະສັດຖາມວ່າ, "ພວກເຈົ້າມີອາຊີບຫຍັງ?" ພວກເຂົາຕອບວ່າ, "ທ່ານເອີຍ ພວກຂ້ານ້ອຍມີອາຊີບເປັນຜູ້ລ້ຽງສັດ, ຄືກັບບັນພະບຸຣຸດຂອງພວກ
ຂ້ານ້ອຍ."[4]ພວກຂ້ານ້ອຍມາຂໍອາໄສຢູ່ປະເທດນີ້, "ເພາະໃນການາອານເກີດການອຶດຢາກຢ່າງຮ້າຍແຮງ. ຈົນບໍ່ມີຫຍ້າສຳລັບລ້ຽງຝູງສັດ.
ກະລຸນາໂຜດໃຫ້ພວກຂ້ານ້ອຍໄດ້ອາໄສຢູ່ໃນເຂດໂກເຊັນນັ້ນເຖີດ."
[5]ກະສັດກ່າວແກ່ໂຢເຊັບວ່າ, "ບັດນີ້ ພໍ່ແລະພວກອ້າຍນ້ອງຂອງເຈົ້າໄດ້ມາຮອດແລ້ວ.[6]ດິນແດນຂອງປະເທດອີຢິບກໍເປັນຂອງພວກເຂົາຄືກັນ.
ພວກເຂົາຕັ້ງຫລັກແຫລ່ງຢູ່ໃນເຂດໂກເຊັນໄດ້ ບ່ອນທີ່ມີດິນດີທີ່ສຸດໃນປະເທດນີ້. ນອກຈາກນີ້ ຖ້າເຈົ້າຮູ້ວ່າ ໃນພວກເຂົາຜູ້ຫນຶ່ງຜູ້ໃດມີຄວາມ
ສາມາດ, ກໍໃຫ້ຮັບລ້ຽງຝູງສັດຂອງເຮົາດ້ວຍ."
[7]ແລ້ວໂຢເຊັບກໍໄດ້ພາຢາໂຄບພໍ່ຂອງຕົນເຂົ້າໄປພົບກະສັດ. ຢາໂຄບອວຍພອນກະສັດ.[8]ແລະກະສັດໄດ້ຖາມຢາໂຄບວ່າ, "ເຈົ້າອາຍຸໄດ້ຈັກປີ
ແລ້ວ?"[9]ຢາໂຄບຕອບວ່າ, "ຊີວິດທີ່ທ່ອງທ່ຽວໄປມາຂອງຂ້ານ້ອຍ ມີຢູ່ 130 ປີ. ເປັນເວລາສັ້ນ ແລະລຳບາກ. ບໍ່ຄືຊີວິດທີ່ທ່ອງທ່ຽວໄປມາຂອງ
ບັນພະບຸຣຸດຂອງຂ້ານ້ອຍ."[10]ຢາໂຄບອວຍພອນກະສັດ ແລະອຳລາກັບໄປ.
[11]ໂຢເຊັບໄດ້ຈັດທີ່ດິນໃຫ້ພໍ່ກັບພວກອ້າຍຂອງຕົນຢູ່ໃນປະເທດອີຢິບ, ໂດຍເລືອກເອົາດິນຕອນດີທີ່ສຸດຢູ່ໃກ້ກັບເມືອງຣາມາເຊັດ, ໃຫ້ເປັນສົມບັດ
ຂອງພວກເຂົາຕາມທີ່ກະສັດໄດ້ສັ່ງ.[12]ໂຢເຊັບໄດ້ຈັດຫາສະບຽງອາຫານໃຫ້ພໍ່, ບັນດາອ້າຍນ້ອງ, ແລະຄອບຄົວຂອງພວກເຂົາທຸກໆຄົນ,
ຕະຫລອດທັງພວກເດັກນ້ອຍທີ່ໄດ້ຕິດຕາມມານຳນັ້ນ.
[13]ການອຶດຢາກຄັ້ງນີ້ຮ້າຍແຮງທີ່ສຸດ; ຈົນວ່າຢູ່ໃນປະເທດອື່ນໆບໍ່ມີອາຫານກິນ ແລະປະຊາຊົນອີຢິບກັບຊາວການາອານກໍອ່ອນເພຍຍ້ອນການ
ອຶດຢາກ.[14]ໂຢເຊັບທ້ອນໂຮມເອົາເງິນທັງຫມົດທີ່ໄດ້ມາຈາກການຂາຍເຂົ້າ, ນຳໄປຖອກທີ່ຄັງຂອງຣາຊວັງ.
[15]ເມື່ອຊາວອີຢິບ ແລະຊາວການາອານຈ່າຍເງິນໝົດແລ້ວ, ຊາວເອຢິບຈຶ່ງຫຸ້ມກັນມາຫາໂຢເຊັບ ແລະເວົ້າວ່າ, "ຂໍອາຫານ! ໃຫ້ພວກຂ້ານ້ອຍ
ກິນແດ່ທ້ອນ ຢ່າປະໃຫ້ພວກຂ້ານ້ອຍຕ້ອງຫິວຕາຍເລີຍ. ກະລຸນາຫາທາງຊ່ວຍພວກຂ້ານ້ອຍແດ່ທ້ອນ ເພາະເງິນຂອງພວກຂ້ານ້ອຍກໍໄດ້ຈ່າຍໄປ
ຈົນຫມົດແລ້ວ."[16]ໂຢເຊັບຈຶ່ງຕອບວ່າ, "ຖ້າພວກເຈົ້າຫມົດເງິນແທ້, ໃຫ້ນຳສັດມາແລກປ່ຽນເອົາເຂົ້າ."[17]ດັ່ງນັ້ນ ພວກເຂົາຈຶ່ງເອົາສັດຂອງຕົນມາ
ໃຫ້ໂຢເຊັບ. ແລະເພິ່ນກໍເອົາອາຫານແລກປ່ຽນເອົາສັດ ເປັນຕົ້ນ: ມ້າ, ແກະ, ແບ້, ງົວ, ແລະລໍ. ໃນປີນັ້ນ ເພິ່ນໄດ້ຈ່າຍອາຫານໃຫ້ແກ່ປະຊາຊົນ
ໂດຍວິທີແລກປ່ຽນກັບສັດຕ່າງໆຂອງພວກເຂົາ.
[18]ປີຕໍ່ມາ ພວກເຂົາກໍພາກັນມາຫາໂຢເຊັບອີກ, ແລະເວົ້າວ່າ, "ທ່ານເອີຍ ພວກຂ້ານ້ອຍຂໍເວົ້າຄວາມຈິງສູ່ທ່ານຟັງ, ໂດຍບໍ່ໄດ້ປິດບັງຫຍັງເລີຍຄື:
ເງິນຂອງພວກຂ້ານ້ອຍກໍຫມົດແລ້ວ ແລະສັດຂອງພວກຂ້ານ້ອຍກໍເປັນຂອງທ່ານແລ້ວ. ດຽວນີ້ ພວກຂ້ານ້ອຍບໍ່ເຫລືອຫຍັງ, ພໍເອົາມາໃຫ້ທ່ານ
ແລກປ່ຽນ ນອກຈາກພວກຂ້ານ້ອຍເອງກັບທີ່ດິນເທົ່ານັ້ນ.[19]ຢ່າປ່ອຍໃຫ້ພວກຂ້ານ້ອຍຕ້ອງອຶດຕາຍເທາະ, ກະລຸນາຫາທາງຊ່ວຍພວກຂ້ານ້ອຍ
ແດ່ຖ້ອນ ຢ່າປ່ອຍໃຫ້ທີ່ດິນຂອງພວກຂ້ານ້ອຍຫວ່າງເປົ່າລ້າໆເລີຍ. ຂໍທ່ານຈົ່ງຊື້ທີ່ດິນຂອງພວກຂ້ານ້ອຍເພື່ອແລກເອົາອາຫານ. ພວກຂ້ານ້ອຍ
ຍິນດີຍອມເປັນຄົນຮັບໃຊ້ຂອງກະສັດ, ແລະທີ່ດິນຂອງພວກຂ້ານ້ອຍກໍໃຫ້ເປັນຂອງເພິ່ນດ້ວຍ. ຈົ່ງເອົາເຂົ້າໃຫ້ພວກຂ້ານ້ອຍເພື່ອພວກຂ້ານ້ອຍ
ຈະບໍ່ອຶດຕາຍ, ແລະເອົາເຂົ້າປູກໃຫ້ພວກຂ້ານ້ອຍເພື່ອທີ່ດິນຈະບໍ່ຖືກປະປ່ອຍໃຫ້ວ່າງເປົ່າລ້າໆ."
[20]ໂຢເຊັບໄດ້ຊື້ເອົາທີ່ດິນທັງຫມົດໃນປະເທດອີຢິບໃຫ້ກະສັດ. ຊາວອີຢິບທຸກຄົນຈຳເປັນຕ້ອງຂາຍທີ່ດິນຂອງຕົນ, ຍ້ອນວ່າການອຶດຢາກເທື່ອນີ້
ຮ້າຍແຮງທີ່ສຸດ. ແລະທີ່ດິນທັງຫມົດ,ໃນປະເທດອີຢິບກໍກາຍເປັນຂອງກະສັດ.[21]ໂຢເຊັບໄດ້ນຳພາຊາວອີຢິບມາເປັນຄົນຮັບໃຊ້, ແລະເຂດແດນ
ຈາກສົ້ນສຸດຂອງປະເທດເບື້ອງນີ້ຈຸເບື້ອງອື່ນ.[22]ຍັງແຕ່ທີ່ດິນຂອງພວກປະໂລຫິດເທົ່ານັ້ນທີ່ເພິ່ນບໍ່ໄດ້ຊື້ເອົາ. ພວກປະໂລຫິດບໍ່ໄດ້ຂາຍທີ່ດິນຂອງ
ພວກຕົນ. ເພາະກະສັດໃຫ້ເງິນອຸດຫນູນແກ່ພວກເຂົາ.
[23]ໂຢເຊັບກ່າວແກ່ປະຊາຊົນວ່າ, "ພວກເຈົ້າເຫັນແລ້ວວ່າ, ມື້ນີ້ຂ້ອຍໄດ້ຊື້ເອົາພວກເຈົ້າ ພ້ອມທີ່ດິນຂອງພວກເຈົ້າມາເປັນຂອງກະສັດ. ອັນນີ້ແມ່ນ
ເຂົ້າປູກ, ເພື່ອໃຫ້ພວກເຈົ້າເອົາໄປຫວ່ານໃນນາ.[24]ເມື່ອຮອດລະດູເກັບກ່ຽວ, ພວກເຈົ້າຕ້ອງເອົາຜົນລະປູກຫນຶ່ງສ່ວນຫ້າໃຫ້ກະສັດ, ສ່ວນທີ່
ເຫລືອນັ້ນ ໃຫ້ເປັນຂອງພວກເຈົ້າເພື່ອເປັນເຂົ້າປູກ ແລະສຳລັບກິນໃນຄອບຄົວ."
[25]ພວກເຂົາຕອບວ່າ, "ທ່ານໄດ້ເຮັດດີ.ຕໍ່ພວກຂ້ານ້ອຍໂດຍຊ່ວຍເອົາຊີວິດຂອງພວກຂ້ານ້ອຍໄວ້. ພວກຂ້ານ້ອຍຍິນດີເປັນຄົນຮັບໃຊ້ຂອງ
ກະສັດ."[26]ດັ່ງນັ້ນ ໂຢເຊັບຈຶ່ງໄດ້ແຕ່ງກົດຫມາຍປົກຄອງທີ່ດິນໄວ້ໃນປະເທດອີຢິບຄື: ຜົນລະປູກຫນຶ່ງສ່ວນຫ້າເປັນຂອງກະສັດ. ກົດຫມາຍນີ້ຍັງ
ໃຊ້ກັນຈົນເຖິງທຸກວັນນີ້. ມີແຕ່ທີ່ດິນຂອງພວກປະໂລຫິດເທົ່ານັ້ນທີ່ບໍ່ເປັນຂອງກະສັດ.
[27]ຊາວອິສະຣາເອນທີ່ອາໄສໃນປະເທດອີຢິບຢູ່ໃນເຂດໂກເຊັນ. ໄດ້ຮັ່ງມີເປັນດີຂຶ້ນພ້ອມທັງມີລູກຫລານຢ່າງຫລວງຫລາຍ.[28]ຢາໂຄບອາໄສຢູ່ໃນ
ປະເທດອີຢິບສິບເຈັດປີ, ຈົນເພິ່ນມີອາຍຸຫນຶ່ງຮ້ອຍສີ່ສິບເຈັດປີ.
[29]ເມື່ອຢາໂຄບຮູ້ສຶກວ່າຕົນເອງໃກ້ຈະຕາຍແລ້ວ, ເພິ່ນຈຶ່ງເອີ້ນເອົາໂຢເຊັບລູກຊາຍຂອງຕົນມາ ແລະເວົ້າວ່າ, "ຈົ່ງວາງມືໃສ່ວ່າງຂາຂອງພໍ່ ແລະ
ສາບານຢ່າງຫນັກແຫນ້ນວ່າ, ເຈົ້າຈະບໍ່ຝັງພໍ່ໄວ້ໃນປະເທດອີຢິບນີ້.[30]ພໍ່ຕ້ອງການໃຫ້ລູກຝັງສົບຂອງພໍ່ໄວ້ຢູ່ໃນບ່ອນຝັງສົບຂອງປູ່ຍ່າຕາຍາຍຂອງ
ພວກເຮົາ, ຈົ່ງເອົາຊາກສົບຂອງພໍ່ອອກຫນີຈາກປະເທດອີຢິບ ແລະຝັງໄວ້ຢູ່ໃນຖໍ້າຂອງບັນພະບຸຣຸດຂອງພວກເຮົາ." ໂຢເຊັບຕອບວ່າ, "ລູກຈະ
ເຮັດຕາມທີ່ພໍ່ຕ້ອງການ."[31]ຢາໂຄບເວົ້າວ່າ, "ຈົ່ງສາບານຕໍ່ພໍ່ວ່າລູກຈະເຮັດດັ່ງນັ້ນ." ໂຢເຊັບໄດ້ສາບານ. ແລ້ວຢາໂຄບກໍໂມທະນາຂອບພຣະຄຸນ
ໂດຍກົ້ມຂາບລົງເທິງທີ່ຫົວຕຽງນອນຂອງຕົນ.


generated on Tue Jun 17 19:01:42 2025

48 [1]ຫລັງຈາກສິ່ງທັງຫລາຍເຫລົ່ານີ້ໄດ້ເກີດຂຶ້ນ, ມີຄົນຫນຶ່ງໄດ້ມາບອກໂຢເຊັບວ່າ, "ເບິ່ງເຖີດພໍ່ຂອງທ່ານປ່ວຍ."
ດັ່ງນັ້ນເຂົາຈຶ່ງໄດ້ນຳເອົາລູກຊາຍທັງສອງຄົນຂອງເຂົາໄປກັບເຂົາ, ຄືມານາເຊ ແລະເອຟຣາອິມ.[2]ເມື່ອຢາໂຄບໄດ້ຮັບການບອກກ່າວ,
"ເບິ່ງເຖີດ, ໂຢເຊັບລູກຊາຍຂອງທ່ານໄດ້ມາເຖິງເພື່ອຈະຢ້ຽມທ່ານ," ອິສາຣາເອນໄດ້ຮວບຮວມກຳລັງ ແລະໄດ້ລຸກຂຶ້ນນັ່ງເທິງຕຽງ.

[3]ຢາໂຄບໄດ້ເວົ້າກັບໂຢເຊັບວ່າ, "ພຣະເຈົ້າຜູ້ຊົງຣິດອຳນາດໄດ້ປາກົດແກ່ພໍ່ທີ່ເມືອງລູເຊໃນແຜ່ນດິນການາອານ.
ພຣະອົງໄດ້ຊົງອວຍພຣະພອນພໍ່[4]ແລະໄດ້ກ່າວກັບພໍ່ວ່າ, 'ເບິ່ງເຖີດເຮົາຈະເຮັດໃຫ້ເຈົ້າເກີດຜົນ,
ແລະເພີ່ມພູນຂຶ້ນຢ່າງມາກມາຍເຮົາຈະເຮັດໃຫ້ເຈົ້າເປັນຊຸມນຸມຂອງບັນດາປະຊາຊາດ.
ເຮົາຈະປຣະທານແຜ່ນດິນນີ້ແກ່ເຊື້ອສາຍທັງຫລາຍຂອງເຈົ້າເປັນກຳມະສິດຕະຫລອດໄປ."
[5]ບັດນີ້ລູກຊາຍທັງສອງຄົນຂອງລູກ, ຜູ້ຊຶ່ງໄດ້ບັງເກີດແກ່ລູກໃນແຜ່ນດິນອີຢິບ ພວກເຂົາເປັນຂອງພໍ່ເອຟຣາອິມ
ແລະມານາເຊຈະເປັນຂອງພໍ່ເມື່ອທີ່ຣູເບນ ແລະຊີເມໂອນ.[6]ເປັນຂອງພໍ່ພວກລູກທີ່ລູກມີຫລັງຈາກ;
ພວກເຂົາທັງຫລາຍຈະເປັນຂອງລູກພວກເຂົາຈະຖືກຈົດຊື່ໄວ້ພາຍໃຕ້ຊື່ຂອງພີ່ນ້ອງຂອງພວກເຂົາໃນມໍຣະດົກຂອງພວກເຂົາ.[7]ແຕ່ສຳຫລັບພໍ່,
ເມື່ອໄດ້ມາຈາກປັດດານຄວາມໂສກເສົ້າຂອງພໍ່ ຕໍ່ສາລາທີ່ໄດ້ເສຍຊີວິດລະຫວ່າງທາງ
ທີ່ຈະໄປແຜ່ນດິນການາອານໃນຂະນະທີ່ຍັງຢູ່ຫ່າງໄກຈາກເອຟຣາທາ. ພໍ່ໄດ້ຝັງນາງໄວ້ລະຫວ່າງທາງທີ່ຈະໄປຍັງເອຟຣາທາ"(ນັ້ນຄື,
ເບັດເລເຮັມ).
[8]ເມື່ອອິສະຣາເອນໄດ້ເຫັນພວກລູກຊາຍຂອງໂຢເຊັບ, ເຂົາໄດ້ເວົ້າ, "ຄົນເຫລົ່ານີ້ເປັນຂອງໃຜ?"[9]ໂຢເຊັບໄດ້ເວົ້າກັບພໍ່ຂອງເຂົາວ່າ,
"ພວກເຂົາຄືລູກຊາຍທັງຫລາຍຂອງລູກ, ຜູ້ເຊິ່ງພຣະເຈົ້າໄດ້ປຣະທານໃຫ້ແກ່ລູກທີ່ນີ້,
"ຈົ່ງນຳພວກເຂົາເຂົ້າມາຫາພໍ່ເພື່ອທີ່ພໍ່ຈະໄດ້ອວຍພອນພວກເຂົາ."[10]ບັດນີ້ດວງຕາຂອງອິສະຣາເອນໄດ້ມືດມົວ,
ເພາະຄວາມມີອາຍຸຫລາຍຂອງເຂົາດັ່ງນັ້ນເຂົາຈຶ່ງແນມບໍ່ເຫັນ, ແລະເຂົາໄດ້ຈູບພວກເຂົາ ແລະ ໄດ້ໂອບກອດພວກເຂົາ.
[11]ອິສະຣາເອນໄດ້ກ່າວກັບໂຢເຊັບວ່າ, "ພໍ່ບໍ່ເຄີຍຄາດຫວັງວ່າທີ່ໄດ້ເຫັນຫນ້າຂອງລູກອີກ,
ແຕ່ພຣະເຈົ້າໄດ້ຊົງອະນຸຍາດໃຫ້ພໍ່ໄດ້ເຫັນລູກທັງຫລາຍຂອງລູກ."[12]ໂຢເຊັບໄດ້ນຳພວກເຂົາອອກຈາກລະຫວ່າງຫົວເຂົ່າຂອງອິສະຣາເອນ,
ແລະຈາກນັ້ນເຂົາ ໄດ້ກົ້ມຫນ້າລົງພື້ນ.[13]ໂຢເຊັບໄດ້ນຳທັງສອງຄືເອຟຣາອິມ, ຢູ່ທາງຂວາມືຂອງເຂົາ ຄືຢູ່ທາງຊ້າຍມືຂອງເຂົາ ຄືຢູ່ທາງຂວາມືຂອງ
ອິສະຣາເອນ, ແລະໄດ້ນຳພວກເຂົາເຂົ້າມາໃກ້ເຂົາ.
[14]ອິສະຣາເອນໄດ້ຍື່ນມືຂວາອອກ ແລະວາງເທິງຫົວຂອງເອຟຣາອິມ, ຜູ້ຊຶ່ງເປັນນ້ອງ, ແລະມືຊ້າຍຂອງເຂົາເທິງຫົວຂອງມານາເຊ.
ເຂົາໄດ້ໄຂ່ວມືຂອງເຂົາເພາະວ່າມານາເຊເປັນລູກຫົວປີ.[15]ອິສະຣາເອນໄດ້ອວຍພອນໂຢເຊັບ, ກ່າວວ່າ,
"ຕໍ່ພຣະພັກພຣະເຈົ້າຜູ້ທີ່ເປັນບັນພຣະບຸຣຸດຂອງຂ້າພຣະອົງ ອັບຣາຮາມ ແລະອິສະຣາເອັນໄດ້ຕິດຕາມ,
ພຣະເຈົ້າຜູ້ທີ່ໄດ້ເບິ່ງຂ້າພຣະອົງຈົນເຖິງວັນນີ້,[16]ຂໍໃຫ້ເທວະດາຜູ້ທີ່ປົກປັກຮັກສາຂ້າພຣະອົງຈາກອັນຕະລາຍທັງຫມົດ.
ຂໍໃຫ້ພຣະອົງຊົງອວຍພຣະພອນເດັກເຫລົ່ານີ້ ຂໍໃຫ້ຊື່ຂອງຂ້າພຣະອົງເປັນຊື່ຂອງພວກເຂົາ, ແລະຊື່ຂອງບັນພະບຸຣຸດຂອງຂ້າພຣະອົງຄື
ອັບຣາຮາມ ແລະອິສະຣາເອນ. ຂໍໃຫ້ພວກເຂົາເຕີບໂຕຂຶ້ນ ທະວີຂຶ້ນເທິງແຜ່ນດິນ."
[17]ເມື່ອໂຢເຊັບໄດ້ເຫັນພໍ່ຂອງເຂົາວາງມືຂວາເທິງຫົວຂອງເອຟຣາອິມ, ເຂົາຮູ້ສຶກບໍ່ສະບາຍໃຈ.
ເຂົາໄດ້ຈັບມືຂອງພໍ່ຂອງເຂົາຍ້າຍຈາກເທິງຫົວເອຣາອິມໄປຍັງເທິງຫົວຂອງມານາເຊ.[18]ໂຢເຊັບໄດ້ເວົ້າກັບພໍ່ຂອງເຂົາ, "ບໍ່ແມ່ນຢ່າງນີ້ ພໍ່ຂອງລູກ;
ເພາະວ່ານີ້ແມ່ນບຸດຫົວປີ. ວາງມືຂວາຂອງພໍ່ເທິງຫົວຂອງເຂົາເຖີດ."
[19]ພໍ່ຂອງເຂົາໄດ້ປະຕິເສດ ແລະໄດ້ເວົ້າວ່າ, "ພໍ່ຮູ້ລູກເອີຍ, ພໍ່ຮູ້. ເຂົາຈະກາຍເປັນຊົນຊາດ, ແລະເຂົາຈະຍິ່ງໃຫ່ຍດ້ວຍ
ນ້ອງຊາຍຂອງເຂົາຈະຍິ່ງໃຫ່ຍກວ່າເຂົາ,
ແລະເຊື້ອສາຍທັງຫລາຍຂອງເຂົາຈະທະວີຄູນກາຍເປັນປະຊາຊາດ."[20]ອິສະຣາເອນໄດ້ອວຍພອນພວກເຂົາໃນວັນນັ້ນ ດ້ວຍຄຳເຫລົ່ານີ້,
"ປະຊາຊົນຂອງອິສະຣາເອນອາດຈະປະກາດຂ່າວປະເສີດອວຍພອນໂດຍຊື່ຂອງເຈົ້າ ລາວວ່າ, 'ຂໍພຣະເຈົ້າເຮັດໃຫ້ເຈົ້າເຫມືອນເອຟຣາອິມ
ແລະເຫມືອນມານາເຊ." ດ້ວຍວິທີນີ້ ອິສະຣາເອນໄດ້ຈັດເອຟຣາອິມໄວ້ກ່ອນມານາເຊ.
[21]ອິສະຣາເອນໄດ້ເວົ້າກັບໂຢເຊັບວ່າ, "ເບິ່ງເຖີດພໍ່ກຳລັງຈະຕາຍ, ແຕ່ພຣະເຈົ້າຈະຊົງຢູ່ກັບລູກ,
ແລະຈະຊົງນຳລູກກັບໄປຍັງດິນແດນຂອງບັນພະບຸຣຸດທັງຫລາຍຂອງລູກ.[22]ເຖິງລູກເຊິ່ງເປັນຄົນດຽວທີ່ຢູ່ເມືອບັນດາພີ່ນ້ອງ,
ພໍ່ມອບທີ່ພູເຂົາທີ່ພໍ່ໄດ້ມາຈາກຄົນອາໂມ ດ້ວຍດາບ ແລະທະນູຂອງພໍ່ໃຫ້ລູກ."

 generated on Tue Jun 17 19:01:42 2025

49 1 ຈາກນັ້ນຢາໂຄບໄດ້ເອີ້ນຫາລູກຊາຍທັງຫລາຍຂອງເຂົາ, ແລະໄດ້ກ່າວວ່າ: "ພວກເຈົ້າທັງຫລາຍຈົ່ງມາລວມກັນ
ແລະເຮົາຈະບອກພວກເຈົ້າເຖິງສິ່ງທີ່ຈະເກີດຂຶ້ນກັບໃນພວກເຈົ້າໃນອານາຄົດ. 2 ພວກເຈົ້າຈົ່ງມາຊຸມນຸມກັນ ແລະຟັງ,
ລູກຊາຍທັງຫລາຍຂອງຢາໂຄບ. ຈົ່ງຟັງອິສະຣາເອນ, ພໍ່ຂອງພວກເຈົ້າ.

3 ຣູເບັນ, ເຈົ້າເປັນລູກຫົວປີຂອງເຮົາ, ເປັນອຳນາດຂອງເຮົາ, ແລະເປັນຈຸດເລີ່ມຕົ້ນຂອງກຳລັງຂອງເຮົາ, ເປັນກຽດຕິຍົດຊື່ສຽງທີ່ສຳຄັນຂອງເຮົາ,
ແລະເປັນພະລັງທີ່ສຳຄັນຂອງເຮົາ. 4 ບໍ່ສາມາດຄວບຄຸມໄດ້ເຫມືອນນ້ຳທີ່ໄຫລແຮງ, ເຈົ້າຈະບໍ່ດີກວ່າຄົນອື່ນ,
ເພາະວ່າເຈົ້າໄດ້ຂຶ້ນໄປເທິງຕຽງຂອງພໍ່ຈາກນັ້ນເຈົ້າ. ໄດ້ເຮັດໃຫ້ມັນເປັນມົນທິນ; ເຈົ້າໄດ້ຂຶ້ນໄປເທິງທີ່ນອນຂອງເຮົາ
5 ຊີເມໂອນ ແລະເລວີເປັນພີ່ນ້ອງກັນ. ອາວຸດແຫ່ງຄວາມຮຸນແຮງຄື ດາບທັງຫລາຍຂອງພວກເຂົາ. 6 ໂອ້ ຈິດວິນຍານຂອງເຮົາ,
ຈະບໍ່ເຂົ້າໄປໃນທີ່ປະຊຸມນຸມຂອງພວກເຂົາ; ເພາະຈິດໃຈຂອງເຮົາມີສັກສີຫລາຍກວ່ານັ້ນ, ເພາະວ່າຄວາມໃຈຮ້າຍຂອງພວກເຂົາ.
ພວກເຂົາໄດ້ຂ້າຜູ້ຊາຍທັງຫລາຍ. ມັນເປັນຄວາມພໍໃຈທີ່ພວກເຂົາເຮັດໃຫ້ພວກງົວໂຕຜູ້ທັງຫລາຍພິການ.
7 ຄວາມໃຈຮ້າຍຂອງພວກເຂົາ, ເຮັດໃຫ້ຖືກແຊ່ງເພາະວ່າມັນຄືນຄວາມດຸຮ້າຍ
ແລະຄວາມໂມໂຫຮ້າຍຂອງພວກເຂົາເພາະວ່າມັນຄືຄວາມໂຫດຮ້າຍ. ເຮົາແບ່ງແຍກພວກເຂົາໃນຢາໂຄບ
ແລະກະຈາຍພວກເຂົາໃນອິສະຣາເອນ.
8 ຢູດາເອີຍ, ພວກພີ່ນ້ອງຈະສັນຣະເສີນເຈົ້າ. ມືຂອງເຈົ້າຈະຢູ່ເທິງຄໍຂອງເຫລົ່າສັດຕຣູຂອງເຈົ້າ.
ລູກຊາຍທັງຫລາຍຂອງພໍ່ເຈົ້າຈະກົ້ມຄຳນັບລົງຕໍ່ຫນ້າເຈົ້າ.
9 ຢູດາເປັນເຫມືອນລູກສິງໂຕ. ລູກຊາຍຂອງເຮົາເອີຍ ເຈົ້າໄດ້ຂຶ້ນໄປຈາກເຫຍື່ອຂອງເຈົ້າ. ເຂົາໄດ້ກົ້ມລົງ, ເຂົາໄດ້ຫມອບລົງເຫມືອນສິງໂຕ,
ເຫມືອນສິງໂຕໂຕເມຍ. ໃຜຈະກ້າປຸກເຂົາ?
10 ໄມ້ເທົ້າຂອງກະສັດຈະບໍ່ຈາກໄປຈາກຢູດາ, ຫລືໄມ້ເທົ້າຂອງຜູ້ປົກຄອງຈະບໍ່ອອກໄປຈາກລະຫວ່າງເທົ້າຂອງເຂົາ, ຈົນກວ່າຊີໂລຈະມາ.
ປະຊາຊາດທັງຫລາຍຈະເຊື່ອຟັງເຂົາ.
11 ຈົ່ງມັດລວາຂອງເຂົາກັບເຫລົ່າຕົ້ນອະງຸ່ນ, ແລະລູກລວາໂຕຜູ້ຂອງເຂົາເຂົ້າກັບເຫລົ່າຕົ້ນອະງຸ່ນທີ່ເລືອກໄວ້
ເຂົາໄດ້ຊັກເສື້ອຜ້າຂອງເຂົາໃນເຫລົ້າອະງຸ່ນ ແລະເສື້ອຄຸມຂອງເຂົາໃນເລືອດແຫ່ງອະງຸ່ນ. 12 ດວງຕາຂອງເຂົາຈະມີສີເຂັ້ມຄືເຫລົ້າອະງຸ່ນ,
ແລະແຂ້ວຂອງເຂົາຈະຂາວຄືນົມ.
13 ເຊບູໂລນ ຈະອາໄສຢູ່ແຄມຊາຍທະເລ. ເຂົາຈະເປັນທ່າເຮືອສຳລັບເຮືອທັງຫລາຍ, ແລະອານາເຂດຂອງເຂົາຈະຂະຫຍາຍອອກໄປເຖິງຊີໂດນ.
14 ອິດຊາຄາເປັນລວາທີ່ມີກຳລັງແຂງແຮງ, ກຳລັງນອນຢູ່ລະຫວ່າງຄອກແກະທັງຫລາຍ. 15 ເຂົາເຫັນທີ່ພັກຜ່ອນທີ່ດີ ແລະແຜ່ນດິນທີ່
ຫນ້າເພິ່ງພໍໃຈ. ເຂົາຈະກົ້ມບ່າຂອງເຂົາລົງຮັບແອກ ແລະກ່ອນເປັນຄົນຮັບໃຊ້ສຳລັບງານນັ້ນ.
16 ດານຈະພິພາກສາປະຊາຊົນຂອງເຂົາຄືເຜົ່າຫນຶ່ງຂອງອິສະຣາເອນ. 17 ດານຈະເປັນງູໂຕຫນຶ່ງທີ່ຢູ່ຂ້າງທາງ,
ງູພິດໂຕຫນຶ່ງໃນທາງນັ້ນທີ່ຈະກັດສົ້ນເທົ້າມ້າ, ເຮັດໃຫ້ຜູ້ທີ່ຂີ່ມ້າຫງາຍຫລັງຕົກ. 18 ຂ້າແຕ່ອົງພຣະຢາເວ,
ຂ້າພຣະອົງລໍຄອຍການຊ່ວຍກູ້ຂອງພຣະອົງ.
19 ກາດເອີຍ ຜູ້ກົດຂີ່ຈະຈູ່ໂຈມເຂົາ, ແຕ່ເຂົາຈະໂຈມຕີພວກເຂົາທີ່ສ່ວນຫລັງຂອງພວກເຂົາ. 20 ອາຫານຂອງອາເຊີຈະສົມບູນ,
ແລະເຂົາຈະຈັດອາຫານສຳລັບກະສັດ. 21 ເນັບທາລີຈະເປັນກວາງໂຕເມຍທີ່ຖືກປ່ອຍ; ເຂົາຈະມີລູກກວາງທີ່ສວຍງາມ.
22 ໂຢເຊັບເປັນງ່າທີ່ເກີດຜົນ, ງ່າທີ່ເກີດຜົນທີ່ຢູ່ໃກ້ຫນອງນ້ຳ, ທີ່ມີງ່າທັງຫລາຍເລື້ອຢູ່ເທິງກຳແພງ. 23 ພວກພົນທະນູຈະໂຈມຕີເຂົາແລະຍິງໄປທີ່ເຂົາ
ແລະຂົ່ມຂູ່ເຂົາ.
24 ແຕ່ທະນູຂອງເຂົາຍັງຄົງຕັ້ງຊື່, ແລະມືຂອງເຂົາເຕັມໄປດ້ວຍຄວາມສຳລານ ເພາະມືຂອງອົງຜູ້ຊົງມີຣິດຂອງຢາໂຄບ, ເພາະຊື່ຂອງພຣະຜູ້ລ້ຽງ
ພຣະສີລາຂອງຂອງອິສະຣາເອນ.
25 ພຣະເຈົ້າຂອງພໍ່ຂອງເຈົ້າ ຈະຊົງຊ່ວຍເຈົ້າແລະພຣະເຈົ້າຜູ້ຊົງຣິດອຳນາດຈະຊົງອວຍພອນເຈົ້າດ້ວຍພຣະພອນຂອງທ້ອງຟ້າເບື້ອງເທິງ,
ພຣະພອນແຫ່ງທີ່ເລິກທີ່ຢູ່ຂ້າງໃຕ້, ແລະພຣະພອນແຫ່ງເຕົ້ານົມ ແລະທ້ອງ.
26 ພຣະພອນແຫ່ງພໍ່ຂອງເຈົ້າຍິ່ງໃຫຍ່ກວ່າພຣະພອນແຫ່ງພູເຂົາໂບຮານ ຫລືສິ່ງທັງຫລາຍທີ່ຫນ້າປາຖະຫນາຂອງເນີນເຂົາໂບຮານທັງຫລາຍ.
ໃຫ້ພຣະພອນທັງຫລາຍຢູ່ເທິງຫົວຂອງໂຢເຊັບ, ໃຫ້ພອນນັ້ນປະດັບເທິງທີ່ຫົວຂອງລາວ ທີ່ຫນ້າຜາກຂອງຜູ້ທີ່ຖືກຕັ້ງໄວ້ສະເພາະ
ຈາກບັນດາຍາດຕິພີ່ນ້ອງຂອງຕົນນັ້ນ.
27 ເບັນຢາມິນເປັນຫມາປ່າທີ່ອຶດຫິວ. ໃນຕອນເຊົ້າເຂົາຈະກືນກິນເຫຍື່ອ, ແລະໃນຕອນແລງເຂົາຈະແບ່ງສິ່ງທີ່ປຸ້ນມາ."
28 ຄົນເຫລົ່ານີ້ຄື ຄົນອິສະຣາເອນ. ທັງສິບສອງເຜົ່າ ນີ້ຄືສິ່ງທີ່ພໍ່ຂອງພວກເຂົາ ໄດ້ເວົ້າກັບພວກເຂົາ ເມື່ອເຂົາໄດ້ອວຍພອນພວກເຂົາ.
ເຂົາໄດ້ອວຍພອນແຕ່ລະຄົນດ້ວຍຄຳອວຍພອນທີ່ເຫມາະສົມ. 29 ຈາກນັ້ນຢາໂຄບໄດ້ສັ່ງພວກເຂົາ ແລະໄດ້ເວົ້າກັບພວກເຂົາ,
"ເຮົາກຳລັງຈະໄປຢູ່ກັບລູກຂອງເຮົາ. ຈົ່ງຝັງເຮົາກັບລູກທັງຫລາຍຂອງເຮົາໃນຖ້ຳທີ່ຢູ່ໃນທົ່ງນາຂອງເອຟະໂຣນຄົນຮິດຕີ,
30 ໃນຖ້ຳທີ່ຢູ່ໃນທົ່ງນາຂອງເປລາຊີງຢູ່ໃກ້ມັມເຣໃນແຜ່ນດິນການາອານ ທົ່ງນາທີ່ອັບຣາຮາມ ໄດ້ຊື້ເພື່ອເປັນສຸສານຈາກເອຟະໂຣນຮິດຕີ ທີ່ນັ້ນ.
31 ພວກເຂົາໄດ້ຝັງອັບຣາຮາມ ແລະຊາຣາເມຍຂອງເຂົາ; ທີ່ນັ້ນພວກເຂົາໄດ້ຝັງອີຊາກ ແລະເຣເບກາ ເມຍຂອງເຂົາ; ແລະທີ່ນັ້ນເຮົາໄດ້ຝັງເລອາ.
32 ທົ່ງນາ ແລະຖ້ຳທີ່ຢູ່ທີ່ນັ້ນໄດ້ຖືກຊື້ຈາກຄົນຮິດຕີ." 33 ເມື່ອຢາໂຄບໄດ້ສັ່ງເສຍລູກຊາຍທັງຫລາຍຂອງເຂົາແລ້ວ,
ເຂົາໄດ້ດຶງຕີນຂອງເຂົາຂຶ້ນເທິງຕຽງ, ໄດ້ຫາຍໃຈເຮືອກສຸດທ້າຍ, ແລະໄດ້ໄປຢູ່ກັບບັນພະບຸຣຸດຂອງເຂົາ.

 generated on Tue Jun 17 19:01:42 2025

50 [1]ແລ້ວໂຢເຊັບກໍໄດ້ໂສກເສົ້າເສຍໃຈເປັນຢ່າງຫລາຍ ເຂົາໄດ້ກົ້ມລົງເທິງໃບຫນ້າຂອງພໍ່ຂອງເຂົາ,
ແລະເຂົາໄດ້ຮ້ອງໄຫ້ເທິງຮ່າງກາຍຂອງພໍ່ເຂົາແລະໄດ້ຈູບເຂົາ.[2]ໂຢເຊັບໄດ້ສັ່ງຄົນຮັບໃຊ້ຂອງເຂົາ
ເຊິ່ງເປັນແພດໃຫ້ອາບນ້ຳຢາຮັກສາຊາກສົບຂອງພໍ່ຂອງເຂົາ. ດັ່ງນັ້ນພວກແພດຈຶ່ງໄດ້ອາບນ້ຳຢາອິດສະຣາເອນ.[3]ພວກເຂົາໃຊ້ເວລາສີ່ສິບວັນ,
ເພື່ອດອງສົບ ແລ້ວຊາວອີຢິບທັງຫລາຍໄດ້ໄວ້ທຸກເພື່ອເຂົາເປັນເວລາເຈັດສິບວັນ.

[4]ເມື່ອເວລາການໄວ້ທຸກໄດ້ຜ່ານໄປ, ໂຢເຊັບໄດ້ເວົ້າກັບຂ້າຣາຊະສຳນັກຂອງຟາໂຣກ່າວວ່າ, "ຖ້າບັດນີ້
ຂ້າພະເຈົ້າໄດ້ເປັນທີ່ຊອບໃນສາຍຕາຂອງພວກທ່ານ, ຂໍໄດ້ໂປດທູນຟາໂຣວ່າ,[5]ພໍ່ຂອງເຂົາໄດ້ໃຫ້ເຂົາສາບານວ່າ, "ເບິ່ງເຖີດ, ເຮົາກຳລັງຈະຕາຍ.
ຈົ່ງຝັງເຮົາໄດ້ສຳລັບຕົວເຮົາເອງໃນແຜ່ນດິນການາອານ. ພວກເຈົ້າຈົ່ງຝັງເຮົາໄວ້ທີ່ນັ້ນ." ບັດນີ້ຂໍໃຫ້ເຮົາໄດ້ຂຶ້ນໄປ ແລະຝັງພໍ່ຂອງເຮົາ,
ແລະຈາກນັ້ນເຮົາຈະກັບມາ.""[6]ຟາໂຣໄດ້ຕອບ, "ໄປເຖີດ ແລະຈົ່ງຝັງພໍ່ຂອງເຈົ້າ, ດັ່ງທີ່ເຂົາໄດ້ໃຫ້ສາບານໄວ້."
[7]ໂຢເຊັບໄດ້ຂຶ້ນໄປຝັງສົບພໍ່ຂອງຕົນ. ຂ້າຣາຊະການທັງຫມົດຂອງຟາໂຣກໍໄດ້ໄປກັບເຂົາຄືຂ້າຣາຊະສຳນັກທັງຫລາຍຂອງຟາໂຣ,
ຂ້າຣາຊະການຜູ້ໃຫຍ່ທັງຫມົດຂອງແຜ່ນດິນອີຢິບ,[8]ພ້ອມດ້ວຍຄົວເຮືອນທັງຫມົດຂອງໂຢເຊັບ, ແລະພວກພີ່ນ້ອງຂອງເຂົາ,
ແລະຄົວເຮືອນຂອງພໍ່ຂອງເຂົາ ຍົກເວັ້ນທັງຫລາຍຂອງພວກເຂົາໄດ້ຖືກປະຖິ້ມທີ່ແຜ່ນດິນເມືອງໂກເຊນ.[9]ຂະບວນລົດຮົບທັງຫລາຍ
ແລະນັກຮົບທັງຫລາຍ. ກໍໄດ້ໄປກັບເຂົາດ້ວຍນັບເປັນຄົນກຸ່ມໃຫຍ່.
[10]ເມື່ອພວກເຂົາໄດ້ມາຮອດລານນວດເຂົ້າແຫ່ງອາທາດ ເທິງອີກຝັ່ງຫນຶ່ງຂອງແມ່ນ້ຳຈໍແດນ,
ພວກເຂົາໄດ້ຮ້ອງຄຳຄວນຢ່າງຫລາຍແລະໂສກເສົ້າເສຍໃຈຢ່າງຍິ່ງ. ທີ່ນັ້ນໂຢເຊັບໄດ້ໃຫ້ມີການຄຳຄວນເພື່ອພໍ່ຂອງເຂົາ.[11]ເປັນເວລາເຈັດວັນ,
ເມື່ອຄົນການາອານ, ທີ່ອາໄສຢູ່ໃນແຜ່ນດິນໄດ້ຄຳຄວນທີ່ລານນວດເຂົ້າແຫ່ງອາທາດ, ພວກເຂົາໄດ້ເວົ້າວ່າ,
"ນີ້ຄືວາລະແຫ່ງຄວາມເສຍໃຈຢ່າງຍິ່ງສຳລັບຄົນອີຢິບທັງຫລາຍ." ນັ້ນຄືສາເຫດທີ່ເອີ້ນສະຖານທີ່ນັ້ນເຊິ່ງຢູ່ອີກພາກຫນຶ່ງຂອງແມ່ນ້ຳຈໍແດນວ່າ,
ອາເບັນມິຊະຣາອິມ.
[12]ດັ່ງນັ້ນລູກຊາຍທັງຫລາຍພວກລູກຫລານຂອງເຂົາ.[13]ໄດ້ກະທຳເພື່ອຢາໂຄບຕາມທີ່ໄດ້ສັ່ງພວກເຂົາໄວ້
ລູກຊາຍທັງຫລາຍຂອງເຂົາໄດ້ນຳເຂົາມາຍັງແຜ່ນດິນການານອານ ແລະໄດ້ຝັງເຂົາໃນຖ້ຳໃນທົ່ງນາຂອງມັດເປລາ, ໃກ້ມັນເຣ.
ອັບຣາຮາມໄດ້ຊື້ຖ້ຳນັ້ນກັບທົ່ງນາເພື່ອເປັນສຸສານ ເຂົາໄດ້ຊື້ຈາກເອຟະໂລນຄົນຮິດຕີ.[14]ຫລັງຈາກທີ່ເຂົາຝັງພໍ່ຂອງເຂົາແລ້ວ,
ໂຢເຊັບກໍໄດ້ກັບໄປຍັງອີຢິບ, ເຂົາ, ແລະພວກພີ່ນ້ອງຂອງເຂົາ, ແລະທັງຫມົດຜູ້ທີ່ໄດ້ເດີນທາງຮ່ວມໄປກັບເຂົາ ເພື່ອຝັງພໍ່ຂອງເຂົາ.
[15]ເມື່ອພວກອ້າຍຂອງໂຢເຊັບໄດ້ເຫັນວ່າພໍ່ຂອງພວກເຂົາໄດ້ເສຍຊີວິດແລ້ວ, ພວກເຂົາໄດ້ເວົ້າວ່າ,
"ມີຍັງຈະເກີດຂຶ້ນຖ້າໂຢເຊັບຍັງໃຈຮ້າຍໃຫ້ພວກເຮົາ
ແລະຕ້ອງການແກ້ແຄ້ນພວກເຮົາຢ່າງເຕັມທີ່ສຳລັບສິ່ງທີ່ຊົ່ວຮ້າຍທີ່ພວກເຮົາໄດ້ກະທຳໄວ້ກັບເຂົາ?"[16]ດັ່ງນັ້ນພວກເຂົາໄດ້ໃຫ້ຄົນໄປຫາໂຢເຊັບ,
ກ່າວວ່າ, "ພໍ່ຂອງທ່ານໄດ້ສັ່ງໄວ້ກ່ອນທີ່ທ່ານຈະຕາຍ, ວ່າ,[17]ຈົ່ງບອກໂຢເຊັບດັ່ງນີ້ວ່າ, "ຂໍໃຫ້ຍົກໂທດການລ່ວງລະເມີດຂອງພວກອ້າຍຂອງເຈົ້າ
ແລະຄວາມບາບຂອງພວກເຂົາໄດ້ກະທຳສິ່ງທີ່ຜິດຕໍ່ເຈົ້າ." ບັດນີ້ຂໍໃຫ້ຍົກໂທດພວກຄົນຮັບໃຊ້ຂອງພຣະເຈົ້າຂອງພໍ່ຂອງທ່ານ."
ໂຢເຊັບໄດ້ຮ້ອງໄຫ້ເມື່ອພວກເຂົາໄດ້ເວົ້າກັບເຂົາ.
[18]ພວກອ້າຍໄດ້ໄປ ແລະກົ້ມຫນ້າຕໍ່ໂຢເຊັບດ້ວຍ ພວກເຂົາວ່າ, "ເບິ່ງເຖີດ,
ພວກເຮົາເປັນຄົນຮັບໃຊ້ທັງຫລາຍຂອງທ່ານ."[19]ແຕ່ໂຢເຊັບໄດ້ຕອບພວກເຂົາວ່າ, "ຢ່າຢ້ານເລີຍ. ຂ້ອຍຢູ່ໃນຫນ້າທີ່ຂອງພຣະເຈົ້າບໍ?
[20]ສຳລັບພວກອ້າຍ, ພວກອ້າຍໄດ້ມຸ້ງທຳຮ້າຍຕໍ່ນ້ອງ, ແຕ່ພຣະເຈົ້າໄດ້ສິ່ງເຮັດໃຫ້ເກີດຜົນດີ, ເພື່ອຮັກສາຊີວິດຄົນຈຳນວນຫລາຍ,
ດັ່ງທີ່ພວກອ້າຍໆເຫັນທຸກມື້ນີ້.[21]ດັ່ງນັ້ນ ບັດນີ້ຢ່າຢານເລີຍ. ນ້ອງຈະຈັດການດູແລພວກອ້າຍໆ ແລະລູກທັງຫລາຍຂອງພວກອ້າຍ."
ເຂົາໄດ້ປອບໃຈພວກເຂົາດ້ວຍວິທີນີ້ແລະໄດ້ເວົ້າຢ່າງເມດຕາຕໍ່ຈິດໃຈຂອງພວກເຂົາ.
[22]ໂຢເຊັບໄດ້ໃຊ້ຊີວິດຢູ່ໃນອີຢິບ, ກັບຄອບຄົວຂອງພໍ່ຂອງເຂົາ. ໄດ້ມີຊີວິດຫນຶ່ງຮ້ອຍສິບປີ.
[23]ໂຢເຊັບໄດ້ເຫັນລູກທັງຫລາຍຂອງເອຟຣາອິມຮອດຮຸ້ນທີ່ສາມ. ເຂົາໄດ້ເຫັນລູກທັງຫລາຍຂອງມາກີ ລູກຊາຍຂອງມັດເສ,
ຜູ້ເຊິ່ງຖືກວາງເທິງເຂົ່າຂອງໂຢເຊັບ.
[24]ໂຢເຊັບໄດ້ເວົ້າກັບພວກພີ່ນ້ອງເຂົາວ່າ, "ເຮົາກຳລັງຈະຕາຍ; ແຕ່ແນ່ນອນພຣະເຈົ້າຈະມາຍາມພວກທ່ານ
ແລະນຳພວກທ່ານອອກໄປຈາກແຜ່ນດິນນີ້ ໄປຍັງແຜ່ນດິນທີ່ພຣະອົງຊົງສັນຍາທີ່ປຣະທານໃຫ້ແກ່ອັບຣາຮາມ, ແກ່ອີຊາກ,
ແລະຢາໂຄບ."[25]ແລ້ວໂຢເຊັບກໍໄດ້ໃຫ້ຄົນອິສະຣາເອນໃຫ້ຄຳສັດຈະສາບານ. ເຂົາໄດ້ເວົ້າ, "ແນ່ນອນພຣະເຈົ້າຈະມາຢາມພວກທ່ານ.
ໃນເວລານັ້ນພວກທ່ານຕ້ອງນຳກະດູກຂອງເຮົາໄປຈາກທີ່ນີ້."[26]ດັ່ງນັ້ນໂຢເຊັບໄດ້ເສຍຊີວິດ, ເມື່ອອາຍຸໄດ້ 110 ປີ.
ພວກເຂົາໄດ້ອາບນ້ຳຢາຮັກສາຊາກສົບເຂົາ ແລະເຂົາໄດ້ຖືກໃຊ້ໄວ້ໃນໂລງໃນອີຢິບ.

# ອົບພະຍົບ

## 1

[1]ຕໍ່ໄປນີ້ແມ່ນລາຍຊື່ຂອງບັນດາລູກຊາຍຂອງອິສະຣາເອນ ຜູ້ໄດ້ເຂົ້າໄປອາໄສໃນປະເທດອີຢິບກັບຢາໂຄບ, ພ້ອມດ້ວຍຄອບຄົວຂອງຕົນຄື:[2]ຣູເບັນ,
ຊີເມໂອນ, ເລວີ, ແລະຢູດາ,[3]ອິດຊາຄາ, ເຊບູລູນ, ແລະເບັນຢາມິນ,[4]ດານ, ນັບທາລີ, ຄາດ ແລະອາເຊ.
[5]ຄົນທັງຫມົດເຫລົ່ານີ້ເປັນເຊື້ອສາຍຂອງຢາໂຄບເຈັດສິບຄົນ. ສ່ວນໂຢເຊັບນັ້ນໄດ້ໄປຢູ່ໃນອີຢິບກ່ອນແລ້ວ.

[6]ຕໍ່ມາໂຢເຊັບ, ກັບພວກອ້າຍນ້ອງຂອງເຂົາ, ແລະ ທຸກຄົນໃນຊ່ວງຍຸກນັ້ນໄດ້ເຖິງແກ່ຄວາມຕາຍໄປຫມົດແລ້ວ.
[7]ຝ່າຍຊາວອິສະຣາເອນຕໍ່ມາກໍໄດ້ມີລູກດົກ, ເພີ່ມທະວີຈຳນວນຂຶ້ນ, ແລະ ມີກຳລັງຫລາຍຂຶ້ນ; ແຜ່ຂະຫຍາຍໄປທົ່ວທັງແຜ່ນດິນນັ້ນ.

 generated on Tue Jun 17 19:01:42 2025

[8]ບັດນີ້ ແລ້ວໄດ້ມີກະສັດອົງໃຫມ່ຂຶ້ນປົກຄອງຣາຊະສົມບັດໃນປະເທດອີຢິບ, ພະອົງບໍ່ຊົງຮູ້ຈັກກັບໂຢເຊັບ.[9]ພະອົງກ່າວກັບຊົນຊາດຂອງພະອົງວ່າ,
"ເບິ່ງແມ້, ຊາວອິສະຣາເອນໄດ້ເພີ່ມຈຳນວນຂຶ້ນຫລາຍ ແລະມີກຳລັງຫລາຍກວ່າພວກເຮົາອີກ.[10]ມາເຖີ້ນ,
ໃຫ້ພວກເຮົາໃຊ້ອຸບາຍຢ່າງສະຫລາດເພື່ອຂັດຂວາງພວກເຂົາ, ບໍ່ດັ່ງນັ້ນພວກເຂົາຈະທະວີຫລາຍຂຶ້ນ, ແລະຖ້າເກີດສົງຄາມຂຶ້ນເມື່ອໃດ,
ພວກເຂົາຈະເຂົ້າຮ່ວມມືກັບພວກສັດຕຣູ, ຫັນມາຕໍ່ສູ້ພວກເຮົາ, ແລະຈະອອກໄປຈາກແຜ່ນດິນນີ້ໄດ້."
[11]ເພາະສະນັ້ນ ຄົນອີຢິບຈຶ່ງຕັ້ງຜູ້ຄວບຄຸມບັງຄັບຊາວອິສະຣາເອນໃຫ້ເຮັດວຽກການຫນັກ. ຊາວອິສະຣາເອນສ້າງເມືອງໃຫ້ແກ່ຟາຣາໂອ ຄື:
ເມືອງປີໂທມ ແລະເມືອງຣາມາເສດ.[12]ແຕ່ເຖິງແມ່ນວ່າ ຊາວອີຢິບບັງຄັບພວກເຂົາຫລາຍເທົ່າໃດ, ຊາວອິສະຣາເອນກໍຍິ່ງເພີ່ມຈຳນວນ ແລະ
ຍິ່ງເພີ່ມທະວີຂຶ້ນໄປອີກເທົ່ານັ້ນ. ເພາະສະນັ້ນ ຊາວອີຢິບຈຶ່ງເລີ່ມຄວາມຢ້ານກົວຕໍ່ຊາວອິສະຣາເອນ.
[13]ຊາວອີຢິບຈຶ່ງບັງຄັບຊາວອິສຣາເອນເຮັດວຽກຢ່າງຫນັກ.[14]ພວກເຂົາໄດ້ເຮັດໃຫ້ຊີວິດຂອງພວກເຂົາຂົມຂື່ນ ດ້ວຍການເຮັດວຽກຢ່າງຫນັກຄື
ນວດດິນ ແລະປັ້ນດິນຈີ່, ແລະ ເຮັດວຽກຫມົດທຸກປະເພດໃນທົ່ງນາ. ພວກເຂົາຖືກບັງຄັບໃຫ້ເຮັດວຽກຫນັກຫລາຍທຸກຢ່າງ.
[15]ຕໍ່ມາກະສັດອີຢິບໄດ້ຊົງມີຄຳສັ່ງໃຫ້ນາງຫມໍຕຳແຍຊາວເຮັບເຣີ; ຜູ້ຫນຶ່ງຊື່ ຊິຟຣາ, ແລະ ອີກຜູ້ຫນຶ່ງຊື່ ປູອາ.[16]ພຣະອົງຊົງກ່າວວ່າ,
"ເມື່ອເຈົ້າໄປຊ່ວຍຍິງຊາວເຮັບເຣີທີ່ກຳລັງເກີດລູກ, ຈົ່ງສັງເກດເບິ່ງເມື່ອພວກນາງເກີດລູກ. ຖ້າເປັນລູກຊາຍກໍໃຫ້ຂ້າເສຍ,
ຖ້າເປັນລູກຍິງກໍໃຫ້ໄວ້ຊີວິດ."[17]ແຕ່ພວກນາງຫມໍຕຳແຍຢຳເກງພຣະເຈົ້າ ແລະບໍ່ໄດ້ເຮັດຕາມຄຳສັ່ງຂອງກະສັດອີຢິບທີ່ສັ່ງພວກນາງ;
ພວກເຂົາເລີຍປ່ອຍໃຫ້ເດັກນ້ອຍຜູ້ຊາຍລອດຊີວິດແທນ.
[18]ກະສັດອີຢິບຈຶ່ງມີຄຳສັ່ງໃຫ້ພວກນາງຫມໍຕຳແຍເຂົ້າເຝົ້າ ແລະຊົງກ່າວຕໍ່ພວກນາງວ່າ, "ເປັນຫຍັງເຈົ້າຈຶ່ງເຮັດເຊັ່ນນີ້,
ແລະປ່ອຍໃຫ້ເດັກນ້ອຍຜູ້ຊາຍມີຊີວິດຢູ່?"[19]ພວກນາງຫມໍຕຳແຍຈຶ່ງທູນຕອບຟາຣາໂອວ່າ,"ເພາະພວກຍິງຊາວເຮັບເຣີ ບໍ່ຄືພວກຍິງຊາວອີຢິບ.
ພວກນາງແຂງແຮງ ແລະຈຶ່ງເກີດລູກກ່ອນທີ່ພວກນາງຫມໍຕຳແຍໄປຮອດພວກເຂົາ."
[20]ພຣະເຈົ້າຈຶ່ງໄດ້ປົກປ້ອງພວກນາງຫມໍຕຳແຍນັ້ນ. ປະຊາຊົນຈຶ່ງຍິ່ງເພີ່ມຈຳນວນຂຶ້ນ ແລະມີກຳລັງເຂັ້ມແຂງຂຶ້ນຫລາຍ.
[21]ເພາະວ່າພວກນາງຫມໍຕຳແຍນັ້ນຢຳເກງພຣະເຈົ້າ,
ພຣະອົງຈຶ່ງປຣະທານໃຫ້ພວກນາງມີຄອບຄົວ[22]ຟາຣາໂອມີຄຳສັ່ງແກ່ປະຊາຊົນຂອງພຣະອົງວ່າ, "ລູກຊາຍຊາວເຮັບເຣີທີ່ເກີດມາ
ພວກເຈົ້າຈົ່ງໂຍນຖິ້ມລົງໃນແມ່ນ້ຳເສຍ, ແຕ່ຖ້າເປັນລູກສາວທຸກຄົນຈົ່ງປ່ອຍໃຫ້ມີຊີວິດຢູ່ໄດ້."

2 [1]ບັດນີ້ ຊາຍເຜົ່າເລວີຄົນຫນຶ່ງໄດ້ແຕ່ງງານກັບຍິງສາວເຜົ່າເລວີຄົນຫນຶ່ງ.[2]ຍິງຜູ້ນັ້ນໄດ້ຖືພາ ແລະ ໄດ້ເກີດລູກຊາຍ
ເມື່ອນາງເຫັນວ່າເດັກນັ້ນເປັນເດັກສົມບູນດີ, ນາງຈຶ່ງເຊື່ອງເຂົາໄວ້ເປັນເວລາສາມເດືອນ.

[3]ແຕ່ເມື່ອນາງບໍ່ສາມາດເຊື່ອງເຂົາໄດ້ອີກຕໍ່ໄປແລ້ວ, ນາງຈຶ່ງເອົາກະຕ່າທີ່ສານດ້ວຍໄມ້ອໍ້ ແລະທາດ້ວຍນ້ຳມັນດິນ ແລະທອຍ.
ຈາກນັ້ນນາງຈຶ່ງໄດ້ວາງເດັກນັ້ນລົງໃນກະຕ່າ ແລ້ວນຳໄປວາງໄວ້ທີ່ກໍຕົ້ນອໍ້ໃນນ້ຳແຄມຕາຝັ່ງແມ່ນ້ຳ.[4]ເອື້ອຍຂອງເດັກນ້ອຍຢືນຢູ່ຫ່າງໆ
ລໍຖ້າເບິ່ງວ່າ ຈະມີເຫດການຫຍັງເກີດຂຶ້ນກັບເຂົາ.
[5]ເມື່ອລູກສາວຂອງກະສັດຟາຣາໂອ ໄດ້ສະເດັດລົງມາອາບນ້ຳທີ່ແມ່ນ້ຳ ໃນຂະນະທີ່ພວກສາວໃຊ້ຍ່າງຕາມແຄມແມ່ນ້ຳນັ້ນ.
ນາງກໍເຫັນກະຕ່າຢູ່ກາງກໍຕົ້ນອໍ້ ແລະຈຶ່ງສັ່ງສາວໃຊ້ໃຫ້ເປັນເອົາມາ.[6]ເມື່ອນາງຊຶ່ງເປີດກະຕ່ານັ້ນ, ນາງກໍເຫັນເດັກນ້ອຍ, ເບິ່ງແມ,
ເດັກນ້ອຍກຳລັງໄຫ້ຂຶ້ນ. ນາງຊຶ່ງເກີດສົງສານເດັກນ້ອຍນີ້ ແລະກ່າວວ່າ, "ນີ້ເປັນລູກຄົນເຮັບເຣີຄົນຫນຶ່ງແນ່ນອນ."
[7]ແລ້ວເອື້ອຍຂອງເດັກນັ້ນຈຶ່ງທູນລູກສາວຂອງຟາຣາໂອວ່າ,
"ຈະໃຫ້ຂ້ານ້ອຍໄປຫາຍິງຊາວເຮັບເຣີມາລ້ຽງເດັກນີ້ໃຫ້ທ່ານບໍ?"[8]ລູກສາວຂອງຟາຣາໂອຈຶ່ງມີຄຳສັ່ງກັບນາງວ່າ, "ຈົ່ງໄປສາ."
ເດັກຜູ້ຍິງຄົນນີ້ຈຶ່ງໄປ ແລະນຳແມ່ຂອງເດັກນ້ອຍນັ້ນມາ.
[9]ລູກສາວຂອງຟາຣາໂອຊຶ່ງສັ່ງກັບແມ່ຂອງເດັກວ່າ, "ຈົ່ງຮັບເດັກຄົນນີ້ໄປ, ແລະລ້ຽງໄວ້ໃຫ້ເຮົາ, ແລະເຮົາຈະໃຫ້ຄ່າຈ້າງໃຫ້ແກ່ເຈົ້າ."
ດັ່ງນັ້ນຍິງນັ້ນຈຶ່ງຮັບເດັກນັ້ນ ແລະກໍລ້ຽງເຂົາໄວ້[10]ເມື່ອເດັກໄດ້ໃຫຍ່ສູງຂຶ້ນ, ນາງກໍນຳເຂົາມອບໃຫ້ລູກສາວຂອງຟາຣາໂອ,
ແລະເຂົາໄດ້ກາຍເປັນລູກຊາຍຂອງນາງ. ນາງຈຶ່ງຕັ້ງຊື່ກັບເຂົາວ່າ ໂມເຊ ແລະກ່າວວ່າ, "ເພາະເຮົາໄດ້ເອົາເຂົາອອກມາຈາກນ້ຳ."
[11]ເມື່ອໂມເຊໃຫຍ່ຂຶ້ນ, ລາວໄດ້ອອກໄປຢ້ຽມຢາມພວກພີ່ນ້ອງ ແລະເຫັນພວກເຂົາເຮັດວຽກຫນັກ. ລາວເຫັນຊາວອີຢິບຄົນຫນຶ່ງ
ກຳລັງຕີຊາວເຮັບເຣີຄົນຫນຶ່ງ, ຊຶ່ງເປັນຊົນຊາດດຽວກັນກັບຕົນເອງ.[12]ລາວເບິ່ງໄປທາງນີ້ ແລະ ທາງນັ້ນ, ແລະເມື່ອລາວບໍ່ເຫັນມີໃຜຢູ່ທີ່ນັ້ນ,
ລາວຈຶ່ງໄດ້ຂ້າຊາວອີຢິບ ແລະເຊື່ອງສົບໄວ້ໃນກອງດິນຊາຍ.
[13]ລາວໄດ້ອອກໄປຂ້າງນອກໃນວັນຕໍ່ມາ, ແລະ, ເບິ່ງແມ, ຊາຍຊາວເຮັບເຣີສອງຄົນກຳລັງຕໍ່ສູ້ກັນຢູ່. ລາວຈຶ່ງເວົ້າກັບຄົນທີ່ເຮັດຜິດນັ້ນວ່າ,
"ເຈົ້າຕີພີ່ນ້ອງຂອງເຈົ້າເອງເຮັດຫຍັງ?"[14]ແຕ່ຊາຍຄົນນັ້ນຕອບວ່າ, "ໃຜຕັ້ງເຈົ້າໃຫ້ເປັນຜູ້ນຳ ແລະເປັນຜູ້ຕັດສິນພວກເຮົາ?
ເຈົ້າກຳລັງວາງແຜນຈະຂ້າເຮົາ ເຫມືອນທີ່ເຈົ້າໄດ້ຂ້າຊາວອີຢິບຄົນນັ້ນບໍ?" ແລ້ວໂມເຊເລີຍຕົກໃຈ ແລະເວົ້າວ່າ, "ສິ່ງທີ່ເຮົາເຮັດນັ້ນ
ຄົງຮູ້ກັນທົ່ວໄປແລ້ວແນ່ນອນ."
[15]ບັດນີ້ເມື່ອຟາຣາໂອຊຶ່ງໄດ້ຮູ້ເລື່ອງນີ້, ພຣະອົງຈຶ່ງພະຍາຍາມຂ້າໂມເຊເສຍ. ແຕ່ໂມເຊຫນີຈາກຟາຣາໂອໄປຢູ່ໃນດິນແດນມີດີອານ.
ທີ່ນັ້ນລາວນັ່ງຢູ່ທີ່ຂ້າງນ້ຳສ້າງແຫ່ງຫນຶ່ງ.[16]ບັດນີ້ ປະໂລຫິດຊາວມີດີອານມີລູກສາວເຈັດຄົນ. ພວກນາງພາກັນມາ, ຕັກນ້ຳ,
ແລະຕື່ມນ້ຳໃນອ່າງໃຫ້ຝູງສັດຂອງພໍ່ກິນ.[17]ມີພວກຄົນລ້ຽງແກະມາເຖິງ ແລະພະຍາຍາມໄລ່ພວກນາງໄປ, ແຕ່ໂມເຊຈຶ່ງໄດ້ໄປ
ແລະຊ່ວຍພວກນາງ. ແລ້ວລາວໃຫ້ນ້ຳດື່ມແກ່ແກະຂອງພວກນາງ.
[18]ເມື່ອຍິງສາວເຫລົ່ານັ້ນກັບຄືນໄປຫາເຣອູເອນຜູ້ເປັນພໍ່, ເຂົາຖາມວ່າ, "ເປັນຫຍັງມື້ນີ້ພວກເຈົ້າຈຶ່ງກັບມາໄວແທ້?"[19]ພວກນາງຕອບວ່າ
ມີຊາວເອຢິບຄົນຫນຶ່ງໄດ້ຊ່ວຍເຮົາໃຫ້ພົ້ນຈາກພວກຄົນລ້ຽງແກະ. ເຂົາຍັງໄດ້ຕັກນ້ຳໃຫ້ພວກເຮົາ
ແລະໃຫ້ຝູງສັດກິນດ້ວຍ."[20]ເຂົາເວົ້າກັບລູກສາວຂອງຕົນວ່າ, "ຊາຍຄົນນັ້ນຢູ່ໃສແລ້ວ? ເປັນຫຍັງພວກເຈົ້າຈຶ່ງຖິ້ມຊາຍຄົນນັ້ນ?
ຟ້າວໄປເອີ້ນເອົາລາວມາກິນອາຫານນຳພວກເຮົາສາ."
[21]ໂມເຊຈຶ່ງຕົກລົງໃຈອາໄສຢູ່ກັບຊາຍຜູ້ນີ້, ຊຶ່ງລາວໄດ້ຍົກນາງຊິບໂປຣາ ຜູ້ເປັນລູກສາວໃຫ້ແຕ່ງງານກັບເຂົາ.[22]ນາງກໍເກີດລູກຊາຍຄົນຫນຶ່ງ,
ແລະໂມເຊຕັ້ງຊື່ລູກຂອງລາວວ່າເກໂຊມ; ລາວເວົ້າວ່າ, "ຂ້າພະເຈົ້າເປັນຜູ້ອາໄສຢູ່ໃນແຜ່ນດິນຂອງຄົນຕ່າງຊາດ."
[23]ເມື່ອເວລາໄດ້ຜ່ານໄປດົນນານ, ກະສັດຂອງອີຢິບກໍສິ້ນພະຊົນ. ຊາວອິສຣາເອນຕ່າງຮ້ອງຄາງ ເພາະການເປັນແຮງງານທາດເຂົາທັງຫລາຍ.
ພວກເຂົາໄດ້ຮ້ອງຂໍຄວາມຊ່ວຍເຫລືອ, ແລະຄຳອ້ອນວອນຂອງພວກເຂົາກໍຂຶ້ນໄປເຖິງພຣະເຈົ້າ, ເພາະເຫດທີ່ພວກເຂົາເປັນທາດນັ້ນ.
[24]ເມື່ອພຣະເຈົ້າໄດ້ຍິນສຽງຮ້ອງຄາງຂອງພວກເຂົາ, ພຣະເຈົ້າລະນຶກເຖິງພັນທະສັນຍາທີ່ໄດ້ຊຶ່ງເຮັດໄວ້ກັບອັບຣາຮາມ, ອີຊາກ, ແລະຢາໂຄບ.
[25]ພຣະເຈົ້າເຫັນຊາວອິສະຣາເອນ, ແລະພຣະອົງຊຶ່ງຮູ້ເຖິງສະພາບຄວາມເປັນໄປຂອງພວກເຂົາ.


generated on Tue Jun 17 19:01:42 2025

3 1ບັດນີ້ ໂມເຊຍັງກຳລັງລ້ຽງຝູງແກະຂອງເຢທະໂລ ພໍ່ເຖົ້າຂອງລາວ, ຜູ້ເປັນປະໂລຫິດຂອງຊາວມີດີອານ.
ໂມເຊໄດ້ນຳຝູງສັດໄປໄກໄປຟາກຫນຶ່ງຂອງຖິ່ນແຫ້ງແລ້ງກັນດານ ແລະມາເຖິງໂຮເຣັບ, ພູຂອງພຣະເຈົ້າ. 2ທີ່ນັ້ນເທວະດາຂອງພຣະຢາເວ
ກໍປາກົດແກ່ໂມເຊໃນແປວໄຟໃນພຸ່ມໄມ້. ໂມເຊເບິ່ງ, ແລະເບິ່ງແມ້, ພຸ່ມໄມ້ກຳລັງໄຫມ້ຢູ່, ແຕ່ພຸ່ມໄມ້ບໍ່ຖືກເຜົາໄຫມ້. 3ໂມເຊຈຶ່ງເວົ້າວ່າ,
"ຂ້ານ້ອຍຈະເຂົ້າໄປ ແລະເບິ່ງສິ່ງທີ່ຫນ້າອັສະຈັນນີ້, ວ່າເປັນຫຍັງພຸ່ມໄມ້ຈຶ່ງບໍ່ຖືກເຜົາໄຫມ້."

4ເມື່ອພຣະຢາເວທອດພຣະເນດວ່າ ເຂົາໄດ້ຫລຽວມາເບິ່ງ, ພຣະເຈົ້າຈຶ່ງເປັ່ງສຽງອອກມາຈາກພຸ່ມໄມ້ ແລະກ່າວວ່າ, "ໂມເຊ, ໂມເຊເອີຍ."
ໂມເຊໄດ້ທູນຕອບວ່າ, "ຂ້ານ້ອຍຢູ່ທີ່ນີ້."5ພຣະເຈົ້າກ່າວວ່າ, "ຢ່າເຂົ້າມາໃກ້ກວ່ານີ້, ຈົ່ງປົດເກີບອອກຈາກຕີນຂອງເຈົ້າ,
ເພາະວ່າບ່ອນທີ່ເຈົ້າກຳລັງຢືນຢູ່ນີ້ເປັນບ່ອນຕັ້ງໄວ້ເພື່ອເຮົາ."6ພຣະອົງກ່າວອີກວ່າ, "ເຮົາເປັນພຣະເຈົ້າຂອງພໍ່ເຈົ້າ, ພຣະເຈົ້າຂອງອັບຣາຮາມ,
ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ." ແລ້ວໂມເຊກໍປົກຫນ້າຂອງລາວ, ເພາະລາວຢ້ານທີ່ຈະຫລຽວເບິ່ງພຣະເຈົ້າ.
7ພຣະເຈົ້າຢາເວກ່າວວ່າ, "ແນ່ນອນເຮົາໄດ້ເຫັນຄວາມທຸກຍາກຂອງປະຊາຊົນຂອງເຮົາ ທີ່ຢູ່ໃນອີຢິບແລ້ວ. ເຮົາໄດ້ຍິນສຽງຮ້ອງຂອງພວກເຂົາ
ຍ້ອນພວກນາຍຄຸມງານຂອງເຂົາ, ເພາະເຮົາຮັບຮູ້ເຖິງຄວາມທຸກຍາກຂອງພວກເຂົາ. 8ເຮົາຈຶ່ງລົງມາເພື່ອຈະປົດປ່ອຍພວກເຂົາ
ໃຫ້ເປັນອິສະຫລະຈາກອຳນາດຂອງຊາວອີຢິບ ແລະນຳພວກເຂົາອອກຈາກແຜ່ນດິນທີ່ອຸດົມສົມບູນ, ດິນແດນກວ້າງຂວາງ,
ໄປຍັງດິນແດນທີ່ມີນ້ຳນົມແລະນ້ຳເຜິ້ງໄຫລ; ໄປຍັງບ່ອນຢູ່ຂອງຊາວການາອານ, ຊາວຮິດຕີ, ຊາວອາໂມ, ຊາວເປຣີຊີ, ຊາວຮີວີ,
ແລະຊາວເຢບຸດ.
9ບັດນີ້ ສຽງຮ້ອງຂອງປະຊາຊົນອິສະຣາເອນ ໄດ້ມາເຖິງເຮົາແລ້ວ. ຍິ່ງກວ່ານັ້ນ, ເຮົາໄດ້ເຫັນການກົດຂີ່ຂົ່ມເຫັງຈາກຊາວອີຢິບ. 10ແລ້ວບັດນີ້,
ເຮົາຈະສົ່ງເຈົ້າໄປເຝົ້າກະສັດຟາຣາໂອ ເພື່ອເຈົ້າຈະນຳຊົນຊາດອິສະຣາເອນ ປະຊາຊົນຂອງເຮົາ ອອກຈາກອີຢິບ."
11ແຕ່ໂມເຊທູນຕອບພຣະເຈົ້າວ່າ, "ຂ້ານ້ອຍເປັນໃຜ, ທີ່ຈະເຝົ້າຟາຣາໂອ ແລະນຳຊົນຊາດອິສະຣາເອນອອກຈາກອີຢິບ?"12ພຣະເຈົ້າຊົງຕອບວ່າ,
"ເຮົາຈະຢູ່ກັບເຈົ້າແນ່ນອນ. ນີ້ຈະເປັນຫມາຍສຳຄັນຕໍ່ເຈົ້າ ທີ່ວ່າເຮົາສົ່ງເຈົ້າໄປ. ເມື່ອເຈົ້າໄດ້ນຳປະຊາຊົນອອກຈາກອີຢິບແລ້ວ,
ພວກເຈົ້າຈະນະມັດສະການເຮົາເທິງພູນີ້."
13ໂມເຊທູນຕໍ່ພຣະເຈົ້າວ່າ, "ເມື່ອຂ້ານ້ອຍໄປຫາຊາວອິສະຣາເອນ ແລະບອກພວກເຂົາວ່າ, 'ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຈົ້າ
ໃຊ້ໃຫ້ເຮົາມາຫາພວກເຈົ້າ' ແລະພວກເຂົາຈະຖາມຂ້ານ້ອຍວ່າ, 'ພຣະອົງມີພຣະນາມວ່າແນວໃດ?'
ຂ້ານ້ອຍຄວນຈະຕອບພວກເຂົາວ່າແນວໃດ?"14ພຣະເຈົ້າຈຶ່ງຕອບໂມເຊວ່າ, "ເຮົາເປັນຜູ້ຊຶ່ງເຮົາເປັນ." ພຣະເຈົ້າຊົງກ່າວວ່າ,
"ເຈົ້າຕ້ອງເວົ້າກັບຊາວອິສະຣາເອນວ່າ, 'ເຮົາໄດ້ສົ່ງຂ້ານ້ອຍມາຫາເຈົ້າທັງຫລາຍ.'"15ພຣະເຈົ້າຈຶ່ງກ່າວກັບໂມເຊອີກວ່າ,
"ເຈົ້າຕ້ອງກ່າວກັບຊາວອິສະຣາເອນວ່າ, 'ພຣະຢາເວ, ພຣະເຈົ້າຂອງບັນພະບຸຣຸດຂອງພວກເຈົ້າ, ພຣະເຈົ້າຂອງອັບຣາຮາມ,
ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ, ຊົງໃຊ້ໃຫ້ຂ້ານ້ອຍມາຫາພວກເຈົ້າ.' ນີ້ເປັນນາມຊື່ຂອງເຮົາຕະຫລອດໄປເປັນນິດ,
ແລະຄົນທຸກຮຸ້ນຈະຈົດຈື່ຈຳເຮົາໃນນາມຊື່ນີ້.'
16ຈົ່ງໄປ ແລະຮວບຮວມພວກຜູ້ອາວຸໂສຂອງອິສະຣາເອນໃຫ້ມາລວມກັນ. ເວົ້າກັບພວກເຂົາວ່າ,'ພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຈົ້າຄື, ພຣະເຈົ້າຂອງອັບຣາຮາມ, ຂອງອີຊາກ, ແລະຂອງຢາໂຄບ, ໄດ້ປາກົດກັບຂ້າພະເຈົ້າ ແລະກ່າວວ່າ,
"ໂດຍແທ້ຈິງແລ້ວ, ເຮົາໄດ້ສັງເກດພວກເຈົ້າ ແລະໄດ້ເຫັນສິ່ງທີ່ໄດ້ເກີດຂຶ້ນກັບພວກເຈົ້າໃນອີຢິບ. 17ເຮົາໄດ້ສັນຍາໄດ້ສັນຍາໄວ້ທີ່ຈະນຳເຈົ້າ
ອອກຈາກການກົດຂີ່ຂົ່ມເຫັງໃນອີຢິບ ໄປຍັງແຜ່ນດິນຂອງຊາວການາອານ, ຊາວຮິດຕີ, ຊາວອາໂມ, ຊາວເປຣີຊີ, ຊາວຮີວີ, ແລະຊາວເຢບຸດ,
ໄປຍັງແຜ່ນດິນທີ່ມີນ້ຳນົມແລະນ້ຳເຜິ້ງໄຫລ.'"18ພວກເຂົາຈະເຊື່ອຟັງຄຳຂອງເຈົ້າ.
ເຈົ້າກັບຜູ້ອາວຸໂສຂອງອິສະຣາເອນຕ້ອງໄປເຂົ້າເຝົ້າກະສັດອີຢິບ, ແລະພວກເຈົ້າຕ້ອງທູນວ່າ, 'ພຣະຢາເວ, ພຣະເຈົ້າຂອງຄົນເຮັບເຣີ,
ປາກົດແກ່ພວກຂ້ານ້ອຍ. ບັດນີ້ ຂໍໂຜດໃຫ້ພວກຂ້ານ້ອຍເດີນທາງໄປຈັກສາມວັນ' ເພື່ອໄປຍັງຖິ່ນແຫ້ງແລ້ງກັນດານ,
ເພື່ອວ່າພວກຂ້ານ້ອຍຈະໄດ້ຖວາຍສັດບູຊາແດ່ພຣະຢາເວ, ພຣະເຈົ້າຂອງພວກຂ້ານ້ອຍ.'
19ແຕ່ເຮົາຮູ້ວ່າກະສັດອີຢິບ ຈະບໍ່ຍອມປ່ອຍພວກເຈົ້າໄປ, ເວັ້ນແຕ່ມືຂອງເຂົາຈະຖືກບັງຄັບ. 20ເຮົາຈະຢຽດມືຂອງເຮົາອອກ
ແລະຕໍ່ສູ້ຊາວອີຢິບດ້ວຍການອັສະຈັນທຸກຢ່າງ ທີ່ເຮົາຈະເຮັດທ່າມກາງພວກເຂົາ. ຫລັງຈາກນັ້ນ, ເຂົາກໍຈະຍອມປ່ອຍພວກເຈົ້າໄປ.
21ເຮົາຈະໃຫ້ປະຊາຊົນເປັນທີ່ພໍໃຈຂອງຊາວອີຢິບ, ດັ່ງນັ້ນເມື່ອເຈົ້າອອກໄປ, ເຈົ້າຈະບໍ່ຕ້ອງໄປດ້ວຍມືເປົ່າ.
22ຜູ້ຍິງທຸກຄົນຈະຮຽກຮ້ອງເອົາເຄື່ອງເງິນແລະຄຳ ແລະເສື້ອຜ້າຈາກພວກເພື່ອນບ້ານຊາວອີຢິບ ແລະຈາກພວກຜູ້ຍິງຄົນອື່ນໆ
ທີ່ອາໄສຢູ່ໃນເຮືອນຂອງເພື່ອນບ້ານນັ້ນ. ພວກເຈົ້າຈະເອົາເຄື່ອງເອ້ເຫລົ່ານັ້ນໄປ ນຸ່ງໃຫ້ພວກລູກຊາຍ ແລະລູກສາວຂອງພວກເຈົ້າ.
ດ້ວຍວິທີນີ້ພວກເຈົ້າຈະຍຶດເອົາຈາກຊາວອີຢິບ."


generated on Tue Jun 17 19:01:42 2025

4 [1]ໂມເຊຈຶ່ງທູນຕອບວ່າ, "ແຕ່ຖ້າພວກເຂົາບໍ່ເຊື່ອຟັງຂ້ານ້ອຍ ຫລືຟັງສຽງຂອງຂ້ານ້ອຍ ແຕ່ກັບເວົ້າວ່າ,
'ພຣະຢາເວບໍ່ໄດ້ຊົງປາກົດແກ່ເຈົ້າດອກ'?"[2]ພຣະຢາເວຈຶ່ງກ່າວກັບເຂົາວ່າ, "ມີຫຍັງຢູ່ໃນມືຂອງເຈົ້າ?" ໂມເຊທູນວ່າ,
"ໄມ້ຄ້ອນເທົ້າ."[3]ພຣະຢາເວກ່າວວ່າ, "ຈົ່ງໂຍນມັນລົງດິນ." ໂມເຊຈຶ່ງໂຍນລົງມັນລົງພື້ນດິນ, ແລະໄມ້ຄ້ອນເທົ້ານັ້ນກໍກາຍເປັນງູ.
ໂມເຊຈຶ່ງແລ່ນຫນີງູ.

[4]ພຣະຢາເວເວົ້າກັບໂມເຊວ່າ, "ຈົ່ງເດ່ມືອອກໄປ ແລະ ຈັບຫາງຂອງມັນໄວ້." ເຂົາຈຶ່ງເດ່ມືອອກໄປ ແລະຈັບງູໄວ້.
ງູນັ້ນກໍກາຍເປັນໄມ້ຄ້ອນເທົ້າຢູ່ໃນມືຂອງລາວອີກຄັ້ງ.[5]"ທັງນີ້ເພື່ອພວກເຂົາຈະໄດ້ເຊື່ອວ່າພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ,
ພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ, ໄດ້ປາກົດແກ່ເຈົ້າແລ້ວ."
[6]ພຣະຢາເວຍັງກ່າວກັບລາວອີກວ່າ, "ບັດນີ້ ຈົ່ງເອົາມືສອດໄວ້ໃນເສື້ອຄຸມຂອງເຈົ້າ." ດັ່ງນັ້ນ ໂມເຊກໍສອດມືໄວ້ໃນເສື້ອຄຸມຂອງລາວ.
ເມື່ອລາວເອົາມືອອກມາ, ເບິ່ງແມ, ມືຂອງເຂົາກໍເປັນພະຍາດຂີ້ທູດ, ຂາວເຫມືອນຫິມະ.[7]ພຣະຢາເວຈຶ່ງກ່າວວ່າ,
"ເອົາມືຂອງເຈົ້າສອດໄວ້ໃນເສື້ອຄຸມອີກເທື່ອຫນຶ່ງ. "ສະນັ້ນໂມເຊກໍສອດມືເຂົ້າໄປໃນເສື້ອຄຸມຂອງລາວ, ແລະເມື່ອເອົາມືອອກມາ, ລາວເຫັນວ່າ
ມືກັບກາຍເປັນປົກະຕິອີກເທື່ອຫນຶ່ງ, ເຫມືອນກັບສ່ວນອື່ນໆຂອງຮ່າງກາຍຂອງລາວ.
[8]ພຣະຢາເວກ່າວວ່າ, "ຖ້າພວກເຂົາບໍ່ເຊື່ອເຈົ້າ-ຖ້າພວກເຂົາບໍ່ໃສ່ໃຈ ຫມາຍສຳຄັນແຫ່ງຣິດອຳນາດຂອງເຮົາໃນເທື່ອທຳອິດນີ້ ຫລືເຊື່ອໃນນັ້ນ,
ແລ້ວພວກເຂົາຈະເຊື່ອຫມາຍສຳຄັນໃນເທື່ອທີສອງ.[9]ຖ້າເຖິງແມ່ນວ່າ ພວກເຂົາບໍ່ເຊື່ອຫມາຍສຳຄັນແຫ່ງຣິດອຳນາດຂອງເຮົາໃນທັງສອງເທື່ອນີ້,
ຫລືຟັງສຽງຂອງເຈົ້າ, ແລ້ວຈົ່ງຕັກນ້ຳຈາກແມ່ນ້ຳ ແລະເທລົງເທິງດິນແຫ້ງ. ນ້ຳທີ່ຕັກມາກໍຈະກາຍເປັນເລືອດເທິງດິນແຫ້ງ."
[10]ແຕ່ໂມເຊທູນຕໍ່ພຣະຢາເວວ່າ, "ພຣະຜູ້ເປັນເຈົ້າ, ຂ້ານ້ອຍບໍ່ແມ່ນຄົນເວົ້າເກັ່ງ, ທັງໃນອະດີດ
ຫລືຕັ້ງແຕ່ເມື່ອພຣະອົງກ່າວກັບຜູ້ຮັບໃຊ້ຂອງພຣະອົງພຸ້ນ. ຂ້ານ້ອຍເປັນຄົນເວົ້າຕິດອ່າງແລະບໍ່ຊັດເຈນ."[11]ພຣະຢາເວກ່າວກັບລາວວ່າ,
"ຜູ້ໃດສ້າງປາກຂອງມະນຸດ? ຜູ້ໃດສ້າງມະນຸດໃຫ້ປາກກືກ ຫລືຫູຫນວກ ຫລືຕາດີ ຫລືຕາບອດ? ບໍ່ແມ່ນພຣະຢາເວບໍ?[12]ບັດນີ້
ຈົ່ງໄປເຖີ້ນແລະເຮົາຈະຢູ່ກັບປາກຂອງເຈົ້າ ແລະສອນເຈົ້າໃນສິ່ງທີ່ຄວນຈະເວົ້າ."[13]ແຕ່ໂມເຊທູນວ່າ, "ພຣະຜູ້ເປັນເຈົ້າ, ໂຜດໃຊ້ຄົນອື່ນໄປສາ,
ໃຜກໍໄດ້ທີ່ພຣະອົງປະສົງຈະສົ່ງໄປ."
[14]ແລ້ວພຣະຢາເວຈຶ່ງໂກດຮ້າຍໂມເຊ. ພຣະອົງກ່າວວ່າ, "ແລ້ວອາໂຣນ, ອ້າຍຂອງເຈົ້າ, ທີ່ເປັນຊາວເລວີ? ເຮົາຮູ້ແລ້ວວ່າລາວເປັນຄົນເວົ້າເກັ່ງ.
ຍິ່ງກວ່ານັ້ນ, ລາວກຳລັງເດີນທາງມາພົບເຈົ້າ, ລາວຈະດີໃຈທີ່ໄດ້ເຫັນເຈົ້າ.[15]ເຈົ້າຈົ່ງເວົ້າກັບລາວ ແລະບອກຄຳທີ່ຈະໃຫ້ລາວເວົ້າ.
ແລ້ວເຮົາຈະຢູ່ກັບປາກຂອງເຈົ້າ ແລະປາກຂອງລາວ, ແລະເຮົາຈະສຳແດງໃຫ້ເຈົ້າທັງສອງຮູ້ວ່າຄວນເຮັດຫຍັງແດ່.
[16]ລາວຈະເວົ້າກັບປະຊາຊົນແທນເຈົ້າ. ລາວຈະເປັນປາກຂອງເຈົ້າ, ແລະເຈົ້າຈະເປັນເຫມືອນພຣະເຈົ້າສຳລັບລາວ.
[17]ເຈົ້າຈົ່ງຖືໄມ້ຄ້ອນເທົ້ານີ້ໄວ້ໃນມື. ດ້ວຍສິ່ງນີ້ເຈົ້າຈະເຮັດຫມາຍສຳຄັນຕ່າງໆ."
[18]ໂມເຊຈຶ່ງກັບໄປຫາເຢທະໂຣພໍ່ເຖົ້າຂອງຕົນ ແລະບອກເພິ່ນວ່າ, "ຂໍໃຫ້ລູກໄປຢ້ຽມຢາມຍາດພີ່ນ້ອງຂອງລູກຊຶ່ງຢູ່ໃນອີຢີບ
ແລະເພື່ອຈະໄດ້ເບິ່ງວ່າເຂົາຍັງມີຊີວິດຢູ່ຫລືບໍ່." ເຢທະໂຣຕອບໂມເຊວ່າ,
"ຈົ່ງໄປດ້ວຍສັນຕິສຸກເຖີ້ນ."[19]ພຣະຢາເວກ່າວກັບໂມເຊໃນດິນແດນມີດີອານວ່າ, "ຈົ່ງໄປ, ກັບໄປອີຢີບ,
ເພາະຄົນທັງຫລາຍທີ່ພະຍາຍາມລ່າເອົາຊີວິດຂອງເຈົ້ານັ້ນຕາຍແລ້ວ."[20]ໂມເຊຈຶ່ງພາເມຍ ແລະ ບັນດາລູກຊາຍຂອງຕົນຂີ່ໂຕລໍ.
ລາວກັບໄປຍັງດິນແດນອີຢີບ, ແລະລາວກໍຖືໄມ້ຄ້ອນເທົ້າຂອງພຣະເຈົ້າໄວ້ໃນມືຂອງຕົນ.
[21]ພຣະຢາເວກ່າວກັບໂມເຊວ່າ, "ເມື່ອເຈົ້າກັບໄປເຖິງອີຢີບ, ຈົ່ງເຮັດການອັສະຈັນທັງຫມົດ ຊຶ່ງເຮົາມອບໄວ້ໃນອຳນາດຂອງເຈົ້າ
ຕໍ່ຫນ້າຂອງກະສັດຟາຣາໂອ. ແຕ່ເຮົາຈະເຮັດໃຫ້ລາວໃຈແຂງກະດ້າງ, ແລະລາວຈະບໍ່ຍອມໃຫ້ປະຊາຊົນໄປ.[22]ເຈົ້າຈົ່ງທູນກັບຟາຣາໂອວ່າ,
'ພຣະຢາເວກ່າວດັ່ງນີ້ວ່າ: ຊາວອິສະຣາເອນເປັນລູກຊາຍຂອງເຮົາ, ເປັນລູກກົກຂອງເຮົາ,[23]ແລະເຮົາບອກແກ່ເຈົ້າວ່າ,
"ຈົ່ງປ່ອຍລູກຊາຍຂອງເຮົາໃຫ້ໄປນະມັດສະການເຮົາ." ແຕ່ຖ້າລາວປະຕິເສດທີ່ຈະບໍ່ປ່ອຍໄປ, ເຮົາຈະຂ້າລູກຊາຍກົກຂອງລາວເສຍ.'"
[24]ໃນລະຫວ່າງທາງ, ເມື່ອພວກເຂົາຢຸດພັກຄ້າງຄືນ, ພຣະຢາເວມາພົບໂມເຊ ແລະ ຊົງປະສົງທີ່ຈະຂ້າລາວເສຍ.
[25]ແລ້ວນາງຊິບໂປຣາຈຶ່ງເອົາມີດຫີນຄົມມາ ແລະຕັດຫນັງປາຍອະໄວຍະວະເພດຂອງລູກຊາຍຂອງຕົນ, ແລ້ວເອົາໄປແຕະຕີນຂອງໂມເຊ.
ແລ້ວນາງຈຶ່ງກ່າວວ່າ, "ແນ່ນອນແລ້ວ ເຈົ້າເປັນເຈົ້າບ່າວແຫ່ງເລືອດ." ເພາະພິທີຕັດນັ້ນ.[26]ແລ້ວພຣະຢາເວຈຶ່ງຊົງໄວ້ຊີວິດລາວ. ນາງຈຶ່ງກ່າວວ່າ,
"ເຈົ້າເປັນເຈົ້າບ່າວທີ່ໄດ້ມາແຫ່ງເລືອດ" ເນື່ອງຈາກເຂົ້າພິທີຕັດ.
[27]ພຣະຢາເວກ່າວແກ່ອາໂຣນວ່າ, "ຈົ່ງໄປພົບກັບໂມເຊໃນຖິ່ນແຫ້ງແລ້ງກັນດານ." ອາໂຣນກໍໄປ, ພົບລາວທີ່ພູຂອງພຣະເຈົ້າ, ແລະຈູບລາວ.
[28]ໂມເຊຈຶ່ງເລົ່າໃຫ້ອາໂຣນເຖິງຖ້ອຍຄຳຂອງພຣະຢາເວທັງຫມົດວ່າພຣະອົງໄດ້ສົ່ງໃຫ້ໄປເວົ້າ
ແລະກ່ຽວກັບຫມາຍສຳຄັນແຫ່ງຣິດອຳນາດຊຶ່ງພຣະຢາເວຊົງສັ່ງໃຫ້ເຮັດ.
[29]ແລ້ວໂມເຊກັບອາໂຣນຈຶ່ງອອກໄປ ແລະ ເອີ້ນປະຊຸມບັນດາຜູ້ອາວຸໂສຂອງຊາວອິສະຣາເອນພ້ອມກັນ.
[30]ອາໂຣນຈຶ່ງກ່າວຖ້ອຍຄຳທັງຫມົດຂອງພຣະຢາເວ ຊຶ່ງໄດ້ກ່າວກັບໂມເຊ.
ໂມເຊໄດ້ສະແດງຫມາຍສຳຄັນໂດຍຣິດອຳນາດຂອງພຣະຢາເວຕໍ່ຫນ້າປະຊາຊົນ.[31]ປະຊາຊົນກໍໄດ້ເຊື່ອ.
ເມື່ອໄດ້ຍິນວ່າພຣະຢາເວສະເດັດມາຢ້ຽມຢາມຫາຊົນຊາດອິສະຣາເອນ ແລະ ພຣະອົງໄດ້ທອດພຣະເນດຄວາມທຸກຍາກຂອງພວກເຂົາແລ້ວ,
ພວກເຂົາຕ່າງກໍຂາບລົງ ແລະນະມັດສະການພຣະອົງ.


generated on Tue Jun 17 19:01:42 2025

5 1ຫລັງຈາກເຫດການເຫລົ່ານີ້ໄດ້ເກີດຂຶ້ນ, ໂມເຊແລະອາໂຣນໄດ້ໄປເຂົ້າເຝົ້າຟາຣາໂອ ແລະທູນວ່າ,
"ພຣະຢາເວພຣະເຈົ້າຂອງຊາວອິສະຣາເອນກ່າວວ່າ: 'ຈົ່ງປ່ອຍປະຊາຊົນຂອງເຮົາໄປ
ເພື່ອພວກເຂົາຈະຈັດພິທີລ້ຽງຖວາຍແກ່ເຮົາຖິ່ນແຫ້ງແລ້ງກັນດານ.'"2ຟາຣາໂອກ່າວວ່າ, "ໃຜແມ່ນພຣະຢາເວ? ເປັນຫຍັງເຮົາຈະຕ້ອງເຊື່ອຟັງ
ແລະປ່ອຍຄົນອິສະຣາເອນໄປ? ເຮົາບໍ່ຮູ້ພຣະຢາເວ; ຍິ່ງໄປກວ່ານັ້ນ, ເຮົາຈະບໍ່ປ່ອຍຄົນອິສະຣາເອນໄປ."

3ພວກເຂົາຈຶ່ງທູນວ່າ, "ພຣະເຈົ້າຂອງຄົນເຮັບເຣີໄດ້ພົບກັບພວກຂ້ານ້ອຍ, ຂໍໂຜດອະນຸຍາດໃຫ້ພວກຂ້ານ້ອຍ
ຈັກສາມມື້ເພື່ອເດີນທາງໄປໃນຖິ່ນແຫ້ງແລ້ງກັນດານ ແລະ ຖວາຍເຄື່ອງບູຊາແດ່ພຣະຢາເວພຣະເຈົ້າຂອງພວກຂ້ານ້ອຍ
ເພື່ອວ່າພຣະອົງຈະບໍ່ລົງໂທດພວກເຮົາດ້ວຍພັຍພິບັດ ຫລືດ້ວຍດາບ."4ແຕ່ກະສັດແຫ່ງອີຢິບເວົ້າກັບພວກເຂົາວ່າ, "ໂມເຊ ແລະອາໂຣນ,
ຍ້ອນຫຍັງພວກເຈົ້າຈະເຮັດໃຫ້ປະຊາຊົນຖິ້ມວຽກງານຂອງພວກເຂົາ? ຈົ່ງກັບໄປເຮັດວຽກຂອງພວກເຈົ້າ."5ພະອົງຍັງກ່າວອີກວ່າ,
"ບັດນີ້ຄົນເຮັບເຣີມີຫລາຍໃນດິນແດນຂອງເຮົາ, ແລະພວກເຈົ້າກຳລັງເຮັດໃຫ້ພວກເຂົາຕ້ອງຢຸດວຽກ."
6ໃນມື້ດຽວກັນນັ້ນ, ຟາຣາໂອ ມີຄຳສັ່ງຕໍ່ຜູ້ຄຸມງານ, ແລະຫົວໜ້າຄົນງານ. ພະອົງກ່າວວ່າ,7"ຕໍ່ໄປຈະບໍ່ຄືເກົ່າອີກ,
ພວກເຈົ້າຢ່າໃຫ້ເຟືອງແກ່ພວກທາດສຳລັບໃຊ້ເຮັດດິນຈີ່. ຈົ່ງໃຫ້ພວກມັນໄປຫາເຟືອງເອງ.8ແຕ່ເຖິງຢ່າງໃດກໍດີ,
ເຈົ້າຕ້ອງກຳນົດໃຫ້ພວກມັນເຮັດດິນຈີ່ໃຫ້ໄດ້ຈຳນວນເທົ່າເດີມ. ຢ່າໃຫ້ຫລຸດລົງ, ເພາະພວກມັນຂີ້ຄ້ານ.
ນີ້ເປັນເຫດທີ່ເຮັດໃຫ້ພວກມັນພາກັນຮ້ອງຂໍ ແລະກ່າວວ່າ, 'ຂໍປ່ອຍໃຫ້ພວກເຮົາໄປ
ແລະຖວາຍເຄື່ອງບູຊາແດ່ພຣະເຈົ້າຂອງພວກເຮົາດ້ວຍ.'9ຈົ່ງໃຫ້ພວກມັນເຮັດວຽກຫນັກເພີ່ມຂຶ້ນ ເພື່ອວ່າພວກມັນຈະໄດ້ມົວແຕ່ເຮັດວຽກ
ແລະບໍ່ໄດ້ສົນໃຈກັບຄຳເວົ້າຕົວະຍົວະນັ້ນ."
10ດັ່ງນັ້ນພວກຄຸມງານ ແລະພວກຫົວໜ້າຄົນງານກໍອອກໄປບອກພວກທາດ. ພວກເຂົາເວົ້າວ່າ, "ນີ້ຄືສິ່ງທີ່ຟາຣາໂອໄດ້ສັ່ງ:
'ເຮົາຈະບໍ່ແຈກຈ່າຍເຟືອງໃຫ້ພວກເຈົ້າອີກຕໍ່ໄປ.11ພວກເຈົ້າຈົ່ງໄປ ແລະຫາເຟືອງເອົາເອງບ່ອນໃດກໍໄດ້ທີ່ມັນມີ,
ແຕ່ຕ້ອງເຮັດດິນຈີ່ໃຫ້ໄດ້ຈຳນວນເທົ່າເດີມ."
12ດັ່ງນັ້ນພວກເຂົາຈຶ່ງແຍກຍ້າຍກັນໄປທົ່ວແຜ່ນດິນອີຢິບ ເພື່ອຊອກຫາເຟືອງ.13ພວກຄຸມວຽກຄອຍເລັ່ງລັດ ແລະເວົ້າວ່າ,
"ເຮັດວຽກຂອງເຈົ້າໃຫ້ສຳເລັດ
ເຫມືອນເມື່ອກ່ອນຕອນທີ່ໄດ້ເຟືອງຢູ່."14ແລ້ວຫົວໜ້າຄົນງານຂອງຟາຣາໂອໄດ້ຂ້ຽນຕີຫົວໜ້າຄຸມງານຂອງຊາວອິສະຣາເອນ,
ຜູ້ທີ່ພວກເຂົາໄດ້ແຕ່ງຕັ້ງໃຫ້ຮັບຜິດຊອບວຽກນັ້ນ. ຫົວໜ້າຄົນງານຖາມຕະຫລອດເວລາວ່າ, "ເປັນຫຍັງແຕ່ມື້ນີ້ ແລະ
ວານນີ້ພວກເຈົ້າຈຶ່ງບໍ່ເຮັດດິນຈີ່ໃຫ້ຄົບຕາມຈຳນວນທີ່ໄດ້ກຳນົດໄວ້, ຕາມທີ່ພວກເຈົ້າເຄີຍເຮັດຄືດັ່ງຜ່ານມານັ້ນ?"
15ດັ່ງນັ້ນຫົວຫນ້າຄົນງານວຽກຊາວອິສະຣາເອນຈຶ່ງເຂົ້າເຝົ້າຟາຣາໂອ ແລະຮ້ອງຂໍຕໍ່ທ່ານ. ພວກເຂົາເວົ້າວ່າ,
"ເຫດໃດທ່ານຈຶ່ງຊົ່ງເຮັດຕໍ່ພວກທາດຂອງທ່ານແບບນີ້?16ພວກທາດຂອງທ່ານບໍ່ໄດ້ຮັບແຈກຈ່າຍເຟືອງອີກຕໍ່ໄປ,
ແຕ່ພວກຄຸມງານກັບສັ່ງພວກເຮົາວ່າ, 'ໃຫ້ເຮັດດິນຈີ່!' ບັດນີ້ພວກເຮົາ, ຜູ້ເປັນທາດຂອງທ່ານ, ເຖິງປານນັ້ນພວກເຮົາກໍໄດ້ຖືກຂ້ຽນຕີ,
ທັງໆທີ່ພວກຄົນຂອງທ່ານເອງທີ່ເປັນຝ່າຍຜິດ."17ແຕ່ຟາຣາໂອກ່າວວ່າ, "ເຈົ້າຄົນຂີ້ຄ້ານ! ເຈົ້າຄົນຂີ້ຄ້ານ! ພວກເຈົ້າຮ້ອງຂໍວ່າ,
'ປ່ອຍພວກເຮົາອອກໄປຖວາຍເຄື່ອງບູຊາແດ່ພຣະຢາເວ.'18ດັ່ງນັ້ນບັດນີ້ຈົ່ງກັບໄປເຮັດວຽກ. ເຮົາຈະບໍ່ຈ່າຍເຟືອງໃຫ້,
ແຕ່ພວກເຈົ້າຕ້ອງເຮັດດິນຈີ່ໃຫ້ໄດ້ຕາມຈຳນວນເທົ່າເດີມ."
19ຫົວຫນ້າຄຸມງານຊາວອິສະຣາເອນເຫັນວ່າພວກຕົນກຳລັງເດືອດຮ້ອນ ເມື່ອພວກເຂົາຖືກສັ່ງວ່າ,
"ພວກເຈົ້າຈະຕ້ອງບໍ່ລົດຈຳນວນດິນຈີ່ໃນແຕ່ລະມື້ລົງ."20ເມື່ອພວກເຂົາກັບມາຈາກການເຝົ້າຟາຣາໂອແລ້ວ, ພວກເຂົາໄດ້ພົບໂມເຊ
ແລະອາໂຣນທີ່ຢືນຢູ່ຂ້າງນອກວັງ.21ພວກເຂົາເວົ້າກັບໂມເຊ ແລະອາໂຣນວ່າ, "ຂໍພຣະຢາເວພິຈາລະນາແລະລົງໂທດພວກທ່ານ,
ເພາະພວກທ່ານເຮັດໃຫ້ພວກເຮົາເປັນທີ່ກຽດຊັງໃນສາຍຕາຍຂອງຟາຣາໂອພ້ອມກັບເຫລົ່າຂ້າຣາຊະການ.
ພວກທ່ານໄດ້ເອົາດາບໃສ່ມືຂອງພວກເຂົາເພື່ອທີ່ຈະຂ້າພວກເຮົາເສຍ."
22ໂມເຊຈຶ່ງກັບໄປຫາພຣະຢາເວ ແລະກາບທູນວ່າ, "ອົງພຣະຜູ້ເປັນເຈົ້າເອີຍ, ເຫດໃດພຣະອົງຊົງນຳຄວາມທຸກຮ້ອນມາເຖິງຄົນເຫລົ່ານີ້?
ເຫດໃດພຣະອົງຈຶ່ງໄດ້ສົ່ງຂ້ານ້ອຍມາເພື່ອວຽກນີ້?23ຕັ້ງແຕ່ຂ້ານ້ອຍໄປເຂົ້າເຝົ້າຟາຣາໂອທູນ ໃນພຣະນາມຂອງພຣະອົງ,
ຟາຣາໂອເຮັດໃຫ້ປະຊາຊົນເດືອດຮ້ອນ, ແລະພຣະອົງບໍ່ໄດ້ຊ່ອຍປະຊາຊົນຂອງພຣະອົງໃຫ້ເປັນອິສະຣະເລີຍ."

 generated on Tue Jun 17 19:01:42 2025

# 6

1ແລ້ວພຣະຢາເວກ່າວກັບໂມເຊວ່າ, "ບັດນີ້ເຈົ້າຈະໄດ້ເຫັນເຫດການຊຶ່ງເຮົາຈະກະທຳແກ່ຟາຣາໂອ. ເຈົ້າຈະເຫັນສິ່ງນີ້,
ເພື່ອລາວຈະປ່ອຍປະຊາຊົນໄປ ເພາະມືອັນເຂັ້ມແຂງຂອງເຮົາ. ເພາະມືອັນເຂັ້ມແຂງຂອງເຮົາ,
ຟາຣາໂອຈະຂັບໄລ່ປະຊາຊົນອອກໄປຈາກແຜ່ນດິນຂອງລາວ."

2ພຣະເຈົ້າກ່າວກັບໂມເຊ ແລະບອກກັບລາວວ່າ, "ເຮົາຄືພຣະຢາເວ.3ເຮົາໄດ້ປາກົດແກ່ອັບຣາຮາມ, ແກ່ອີຊາກ
ແລະແກ່ຢາໂຄບໃນຖານະພຣະເຈົ້າຜູ້ຊົງຣິດອຳນາດຫຍິ່ງໃຫຍ່; ແຕ່ເຮົາບໍ່ໄດ້ໃຫ້ພວກເຂົາຮູ້ຈັກ ເຮົາໃນນາມພຣະຢາເວ,.
4ເຮົາຍັງຕັ້ງພັນທະສັນຍາກັບພວກເຂົາ, ເພື່ອຈະຍົກແຜ່ນດິນການາອານໃຫ້ແກ່ພວກເຂົາ,
ແຜ່ນດິນຊຶ່ງພວກເຂົາເຄີຍໄດ້ອາໄສໃນຖານະຄົນຕ່າງດ້າວ, ແຜ່ນດິນຊຶ່ງພວກເຂົາໄດ້ເດີນທາງໄປມາ.5ຍິ່ງໄປກວ່ານັ້ນ,
ເຮົາໄດ້ຍິນສຽງຄ້ຳຄວນຂອງຊາວອິສະຣາເອນຊຶ່ງເປັນທາດຂອງອີຢິບ, ແລະເຮົາຍັງຈົດຈຳພັນທະສັນຍາຂອງເຮົາໄດ້.
6ສະນັ້ນ, ຈົ່ງໄປບອກກັບອິສະຣາເອນວ່າ, 'ເຮົາຄືພຣະຢາເວ. ເຮົາຈະປົດປ່ອຍພວກເຈົ້າໃຫ້ພົ້ນຈາກການເປັນທາດຂອງຊາວອີຢິບ,
ແລະເຮົາຈະເຮັດໃຫ້ພວກເຈົ້າພົ້ນຈາກອຳນາດຂອງພວກເຂົາ. ເຮົາຈະຊ່ວຍກອບກູ້ພວກເຈົ້າດ້ວຍການສຳແດງອຳນາດຂອງເຮົາ,
ແລະດ້ວຍການພິພາກສາລົງໂທດຢ່າງຫນັກ.7ເຮົາຈະຮັບພວກເຈົ້າເປັນປະຊາຊົນຂອງເຮົາ, ເຮົາຈະເປັນພຣະເຈົ້າຂອງພວກເຈົ້າ.
ແລ້ວພວກເຈົ້າຈະຮູ້ວ່າ ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ, ຜູ້ໄດ້ນຳພວກເຈົ້າອອກມາຈາກການເປັນທາດຂອງຊາວອີຢິບ.
8ເຮົາຈະນຳພວກເຈົ້າເຂົ້າໄປຍັງແຜ່ນດິນຊຶ່ງເຮົາໄດ້ປະຕິຍານໄວ້ວ່າຈະມອບໃຫ້ແກ່ອັບຣາຮາມ, ແກ່ອີຊາກ, ແລະແກ່ຢາໂຄບ.
ເຮົາຈະມອບແຜ່ນດິນນັ້ນໃຫ້ແກ່ພວກເຈົ້າເປັນກຳມະສິດ. ເຮົາຄືພຣະຢາເວ.'"9ເມື່ອໂມເຊບອກເລື່ອງນີ້ແກ່ຊາວອິສະຣາເອນ,
ແຕ່ພວກເຂົາກັບບໍ່ຍອມຟັງລາວ ເພາະຄວາມທໍ້ຖອຍຂອງພວກເຂົາ ເນື່ອງຈາກການເປັນທາດຢ່າງຫ້ຽມໂຫດ.
10ແລ້ວພຣະຢາເວກ່າວແກ່ໂມເຊ ແລະຊົງບອກວ່າ,11"ຈົ່ງໄປບອກຟາຣາໂອ,
ກະສັດແຫ່ງອີຢິບໃຫ້ປ່ອຍຊາວອິສະຣາເອນອອກຈາກແຜ່ນດິນຂອງພຣະອົງເສຍ."12ໂມເຊທູນກັບພຣະຢາເວວ່າ,
"ແມ່ນແຕ່ຊາວອິສະຣາເອນຍັງບໍ່ເຊື່ອຟັງຂ້ານ້ອຍ, ແລ້ວຟາຣາໂອຈະເຊື່ອຟັງຂ້ານ້ອຍຫລື,
ໃນເມື່ອຂ້ານ້ອຍເປັນຄົນເວົ້າບໍ່ເກັ່ງ?"13ພຣະຢາເວຈຶ່ງກ່າວແກ່ໂມເຊ ແລະ ແກ່ອາໂຣນ. ພຣະອົງໄດ້ສັ່ງພວກເຂົາໃຫ້ແຈ້ງແກ່ຊາວອິສະຣາເອນ
ແລະ ແກ່ຟາຣາໂອ, ກະສັດແຫ່ງອີຢິບ, ໃຫ້ປ່ອຍຊາວອິສະຣາເອນໃຫ້ອອກຈາກແຜ່ນດິນອີຢິບ.
14ຕໍ່ໄປນີ້ເປັນຕົ້ນຕະກຸນຂອງພວກເຂົາ: ລູກຊາຍທັງຫລາຍຂອງຣູເບັນ, ຜູ້ເປັນລູກຊາຍກົກຂອງອິສະຣາເອນ, ຮາໂນກ, ປານລູ, ເຮຊະໂຣນ,
ແລະກາມີ. ຄົນເຫລົ່ານີ້ຢູ່ໃນຕະກຸນບັນພະບູລຸດຂອງຣູເບັນ.15ບັນດາລູກຊາຍຂອງຊີເມໂອນຄືເຢມູເອນ, ຢາມິນ, ໂອຮາດ, ຢາກິນ, ໂຊຮາ,
ແລະຊາອູນ—ຊຶ່ງແມ່ເປັນຍິງຊາວການາອານ. ຄົນເຫລົ່ານີ້ຢູ່ໃນຕະກຸນບັນພະບຸຣຸດຂອງຊີເມໂອນ.
16ຕໍ່ໄປນີ້ຄືລາຍຊື່ບັນດາລູກຊາຍຂອງເລວີ, ຕາມລຳດັບວົງຕະກຸນຂອງພວກເຂົາ. ຄື ເກໂຊນ, ໂກຮາດ, ແລະເມຣາຣີ. ເລວີມີຊີວິດຢູ່ຈົນອາຍຸໄດ້
137 ປີ.17ລູກຊາຍຂອງເກໂຊນຄື ລິບນີ ແລະຊີເມອີ.18ລູກຊາຍຂອງໂກຮາດຄື ອຳຣາມ, ອິດຊະຮາ, ເຮັບໂຣນ, ແລະອຸດຊີເອນ.
ໂກຮາດມີຊີວິດຢູ່ຈົນອາຍຸໄດ້ 133 ປີ.19ບັນດາລູກຊາຍຂອງເມຣາຣີ ຄື ມາລີ ແລະມູຊີ. ຄົນເຫລົ່ານີ້ໄດ້ກາຍມາເປັນບັນພະບຸຣຸດຂອງເລວີ,
ຕາມລຳດັບພົງພັນຂອງພວກເຂົາ.
20ອຳຣາມໄດ້ແຕ່ງງານກັບໂຢເກເບັດ, ຜູ້ເປັນນ້ອງສາວຂອງພໍ່ຂອງຕົນ. ນາງໄດ້ເກີດລູກຊາຍໃຫ້ລາວຊື່ ອາໂຣນ ແລະໂມເຊ. ອຳຣາມມີອາຍຸ
137 ປີ ແລະກໍສິ້ນຊີວິດ.21ບັນດາລູກຊາຍຂອງອິຊະຮາ ຄື ໂກຣາ, ເນເຟັກ, ແລະຊິກຣີ.22ບັນດາລູກຊາຍຂອງອຸດຊີເອນ ຄື ມີຊາເອນ,
ເອນຊາຟັນ, ແລະສິທະຣີ.
23ອາໂຣນໄດ້ແຕ່ງງານກັບເອລີຊາບາ, ລູກສາວຂອງອຳມີນາດາບ, ນ້ອງສາວຂອງນາໂຊນ. ນາງໄດ້ເກີດລູກຊາຍໃຫ້ກັບລາວຊື່ ນາດາບ, ອາບີຮູ,
ເອເລອາຊາ ແລະອີທາມາ.24ບັນດາລູກຊາຍຂອງໂກຣາ ຄື ອັດສີ, ເອນການາ, ແລະອາບີນາສັບ. ຄົນເຫລົ່ານີ້ຢູ່ໃນຕະກຸນບັນພະບຸຣຸດຂອງໂກຣາ.
25ເອເລອາສາລູກຊາຍຂອງອາໂຣນແຕ່ງງານກັບລູກສາວຄົນຫນຶ່ງຂອງປູຕີເອນ. ນາງເກີດລູກຊາຍໃຫ້ລາວຊື່ ຟີເນຮາດ. ທີ່ກ່າວມາແລ້ວນັ້ນ
ລ້ວນເປັນຕົ້ນຕະກຸນເລວີຕາມລຳດັບພົງພັນຂອງພວກເຂົາ.
26ແມ່ນອາໂຣນ ແລະ ໂມເຊນີ້ເອງ ທີ່ພຣະຢາເວບອກກັບພວກເຂົາວ່າ, "ຈົ່ງນຳຊາວອິສະຣາເອນອອກຈາກແຜ່ນດິນອີຢິບ,
ຕາມຫມວດຕາມກອງເຂົາ."27ອາໂຣນ ແລະໂມເຊກ່າວແກ່ຟາຣາໂອ, ກະສັດຂອງຊາວອີຢິບ,
ເພື່ອຂໍອະນຸຍາດໃຫ້ພວກເຂົານຳຊາວອິສະຣາເອນອອກໄປຈາກອີຢິບ. ທັງສອງຄົນນີ້ຄືໂມເຊແລະອາໂຣນຄົນນີ້ແຫລະ.
28ເມື່ອພຣະຢາເວກ່າວກັບໂມເຊໃນແຜ່ນດິນອີຢິບ,29ພຣະອົງກ່າວແກ່ວ່າ, "ເຮົາແມ່ນພຣະຢາເວ. ຈົ່ງໄປບອກຟາຣາໂອ, ກະສັດແຫ່ງອີຢິບ,
ທຸກສິ່ງຕາມທີ່ເຮົາຈະບອກເຈົ້າ."30ແຕ່ໂມເຊທູນແກ່ພຣະຢາເວວ່າ, "ຂ້ານ້ອຍເປັນຄົນເວົ້າບໍ່ເກັ່ງ, ເຫດໃດຟາຣາໂອຈຶ່ງຕ້ອງເຊື່ອຟັງຂ້ານ້ອຍ?"


generated on Tue Jun 17 19:01:42 2025

7 [1]ພຣະຢາເວບອກໂມເຊວ່າ, "ເບິ່ງແມ, ເຮົາໄດ້ຕັ້ງເຈົ້າເປັນ ເຫມືອນພະເຈົ້າຕໍ່ຟາຣາໂອ.
ອາໂຣນອ້າຍຂອງເຈົ້າຈະເປັນເຫມືອນຜູ້ປະກາດພຣະຄັມຂອງເຈົ້າ.[2]ເຈົ້າຈະຕ້ອງເວົ້າທຸກສິ່ງທີ່ເຮົາສັ່ງເຈົ້າໃຫ້ເວົ້າ.
ແລ້ວອາໂຣນອ້າຍຂອງເຈົ້າຈະບອກແກ່ຟາຣາໂອວ່າໃຫ້ປ່ອຍປະຊາຊົນອິສະຣາເອນອອກໄປຈາກແຜ່ນດິນຂອງລາວ.

[3]ແຕ່ເຮົາຈະເຮັດໃຫ້ໃຈຂອງຟາຣາໂອໃຈແຂງ, ແລະເຮົາຈະສຳແດງບັນດາຫມາຍສຳຄັນແຫ່ງຣິດອຳນາດຂອງເຮົາ,
ທັງການອັດສະຈັນຫລາຍຢ່າງ, ໃນແຜ່ນດິນອີຢິບ.[4]ແຕ່ຟາຣາໂອກໍຈະບໍ່ເຊື່ອຟັງເຈົ້າ, ເພື່ອເຮົາຈະຢຽດມືຂອງເຮົາເຫນືອອີຢິບ
ແລະພາພົນໂຍທາຂອງເຮົາ, ປະຊາຊົນຂອງເຮົາ, ແລະບັນດາພົງພັນອິສະຣາເອນ, ອອກຈາກແຜ່ນດິນອີຢິບດ້ວຍການລົງໂທດຢ່າງຫນັກ.
[5]ຊາວອີຢິບຈະໄດ້ຮູ້ວ່າ ເຮົາຄືພຣະຢາເວ ເມື່ອເຮົາໄດ້ຢຽດມືຂຶ້ນເຫນືອອີຢິບ ແລະພາຊົນຊາດອິສະຣາເອນອອກຈາກທ່າມກາງພວກເຂົາ."
[6]ໂມເຊ ແລະ ອາໂຣນຈຶ່ງເຮັດຕາມນັ້ນ; ຄືພວກເຂົາໄດ້ເຮັດດັ່ງທີ່ພຣະຢາເວສັ່ງພວກເຂົານັ້ນ.[7]ໂມເຊມີອາຍຸແປດສິບປີ, ແລະ
ອາໂຣນມີອາຍຸແປດສິບສາມປີ ເມື່ອເຂົາທັງສອງເຂົ້າໄປທູນຟາຣາໂອນັ້ນ.
[8]ພຣະຢາເວກ່າວແກ່ໂມເຊ ແລະອາໂຣນ,[9]"ເມື່ອຟາຣາໂອສັ່ງເຈົ້າວ່າ, 'ຈົ່ງສຳແດງການອັດສະຈັນເບິ່ງແມ,' ແລ້ວເຈົ້າຈົ່ງບອກອາໂຣນວ່າ,
'ເອົາໄມ້ຄ້ອນເທົ້າໄປນຳ ແລະໂຍນມັນລົງຕໍ່ຫນ້າຟາຣາໂອ, ແລ້ວໄມ້ຄ້ອນເທົ້າຈະໄດ້ກາຍເປັນງູ.'"[10]ແລ້ວໂມເຊ
ແລະອາໂຣນຈຶ່ງເຂົ້າເຝົ້າຟາຣາໂອ, ແລະ ພວກເຂົາໄດ້ເຮັດຕາມທີ່ພຣະຢາເວສັ່ງໄວ້ນັ້ນ. ອາໂຣນໂຍນໄມ້ຄ້ອນເທົ້າຂອງລາວລົງຕໍ່ຫນ້າຟາຣາໂອ
ແລະ ບັນດາຂ້າຣາຊະການຂອງເຂົາ, ແລະ ໄມ້ຄ້ອນເທົ້ານັ້ນກາຍເປັນງູ.
[11]ຝ່າຍຟາຣາໂອຈຶ່ງສັ່ງໃຫ້ເອີ້ນນັກປຣາດຂອງພະອົງ ແລະ ຫມໍຜີມາເຊັ່ນກັນ.
ພວກເຂົາກໍສາມາດເຮັດສິ່ງອັດສະຈັນຄືນຄືກັນດ້ວຍມາຍາກົນຂອງພວກເຂົາ.[12]ພວກເຂົາຕ່າງຄົນຕ່າງກໍໂຍນໄມ້ຄ້ອນເທົ້າຂອງຕົນລົງ,
ແລະໄມ້ຄ້ອນເທົ້າທັງຫລາຍກໍກາຍເປັນງູ. ແຕ່ໄມ້ຄ້ອນເທົ້າຂອງອາໂຣນໄດ້ກືນກິນງູຂອງພວກເຂົາທັງຫມົດເສຍ.
[13]ແຕ່ຟາຣາໂອຍັງຄົງມີໃຈແຂງຢູ່, ແລະພະອົງບໍ່ຍອມຟັງ, ດັ່ງທີ່ພຣະຢາເວໄດ້ກ່າວໄວ້ລ່ວງຫນ້າແລ້ວ.
[14]ພຣະຢາເວບອກແກ່ໂມເຊວ່າ, "ໃຈຂອງຟາຣາໂອແຂງ, ແລະລາວຍັງຄົງປະຕິເສດທີ່ຈະປ່ອຍປະຊາຊົນໄປ.
[15]ເຈົ້າຈົ່ງໄປຫາຟາຣາໂອໃນຕອນເຊົ້າໃນຂະນະທີ່ລາວໄປຍັງແມ່ນ້ຳ. ຈົ່ງລໍຖ້າລາວຢູ່ແຄມແມ່ນ້ຳເພື່ອພົບກັບລາວ, ແລະ
ເອົາໄມ້ຄ້ອນເທົ້າທີ່ກາຍເປັນງູໄດ້ນັ້ນໄປນຳ.
[16]ແລ້ວກ່າວແກ່ລາວວ່າ, 'ພຣະຢາເວ, ພຣະເຈົ້າຂອງຊາວເຮັບເຣີໄດ້ສົ່ງຂ້ານ້ອຍມາກ່າວດັ່ງນີ້ວ່າ,
"ຈົ່ງປ່ອຍປະຊາຊົນຂອງເຮົາອອກໄປເພື່ອພວກເຂົາຈະໄດ້ນະມັດສະການ ເຮົາໃນຖິ່ນແຫ້ງແລ້ງກັນດານ.
ຈົນບັດນີ້ເຈົ້າກໍຍັງບໍ່ໄດ້ເຊື່ອຟັງເຮົາແຕ່ຢ່າງໃດເລີຍ."[17]ພຣະຢາເວໄດ້ກ່າວດັ່ງນີ້ວ່າ: ດ້ວຍເຫດການຕໍ່ໄປນີ້ ເຈົ້າຈະໄດ້ຮູ້ວ່າເຮົາເປັນພຣະຢາເວ.
ເຮົາຈະຟາດນ້ຳໃນແມ່ນ້ຳນີເລດ້ວຍໄມ້ຄ້ອນເທົ້າໃນມືຂອງເຮົາ, ແລະແມ່ນ້ຳນັ້ນຈະກາຍເປັນເລືອດ.[18]ປາທີ່ອາໃສໃນແມ່ນັ້ນຈະຕາຍ,
ແລະແມ່ນ້ຳຈະເນົ່າເຫມັນ. ຊາວອີຢິບຈະບໍ່ສາມາດດື່ມນ້ຳຈາກແມ່ນ້ຳໄດ້.'"
[19]ແລ້ວພຣະຢາເວສັ່ງໂມເຊວ່າ, "ເຈົ້າຈົ່ງບອກອາໂຣນວ່າ, 'ໃຫ້ເອົາໄມ້ຄ້ອນເທົ້າຂອງເຈົ້າ ແລະຍື່ນມືອອກໄປເຫນືອນ້ຳທັງຫລາຍແຫ່ງອີຢິບ,
ແລະເຫນືອແມ່ນ້ຳທັງຫລາຍ, ເຫນືອອາຍນ້ຳທັງຫລາຍ, ເຫນືອສະລອຍນ້ຳທັງຫລາຍ, ແລະຫນອງທັງຫມົດຂອງພວກເຂົາ,
ເພື່ອວ່ານ້ຳຂອງພວກເຂົາຈະກາຍເປັນເລືອດ. ຈົ່ງເຮັດເຊັ່ນນີ້ເພື່ອວ່າເລືອດຈະເຕັມໄປທົ່ວແຜ່ນດິນອີຢິບ,
ແມ່ນແຕ່ຖັງນ້ຳທີ່ພາຊະນະທີ່ເຮັດດ້ວຍໄມ້ ແລະ ພາຊະນະຫີນ.'"
[20]ໂມເຊກັບອາໂຣນຈຶ່ງເຮັດຕາມຄຳສັ່ງຂອງພຣະຢາເວ. ອາໂຣນຈຶ່ງຍົກໄມ້ຄ້ອນເທົ້າຂຶ້ນ ແລະຟາດລົງໃນນ້ຳໃນແມ່ນ້ຳ,
ຕໍ່ຫນ້າຕໍ່ຕາຂອງຟາຣາໂອ ແລະຂ້າຣາຊະການຂອງເຂົາ. ນ້ຳທັງ ຫມົດໃນແມ່ນ້ຳຈຶ່ງກາຍເປັນເລືອດ.[21]ປາໃນແມ່ນ້ຳຕາຍ,
ແລະແມ່ນ້ຳເລີ່ມສົ່ງກິ່ນເຫມັນ. ຊາວອີຢິບບໍ່ອາດດື່ມນ້ຳຈາກແມ່ນ້ຳໄດ້, ແລະມີແຕ່ເລືອດຢູ່ເຕັມທົ່ວທຸກແຫ່ງໃນແຜ່ນດິນອີຢິບ.
[22]ແຕ່ພວກນັກມາຍາກົນຂອງຊາວເອຢິບກໍເຮັດໄດ້ເຫມືອນກັນດ້ວຍມາຍາກົນຂອງພວກເຂົາ. ດັ່ງນັ້ນໃຈຂອງຟາຣາໂອຈຶ່ງຍັງຄົງແຂງກະດ້າງ,
ແລະປະຕິເສດທີ່ຈະເຊື່ອຟັງໂມເຊ ແລະ ອາໂຣນ, ເປັນໄປຕາມທີ່ພຣະຢາເວກ່າວໄວ້ວ່າຈະເກີດຂຶ້ນເຊັ່ນນັ້ນ.
[23]ແລ້ວຟາຣາໂອກໍສະເດັດກັບເມືອ ແລະເຂົ້າໄປໃນວັງຂອງພະອົງ. ພະອົງບໍ່ໄດ້ສົນໃຈແມ້ໃນເຫດການຄັ້ງນີ້.
[24]ຊາວອີຢິບທັງຫມົດກໍພາກັນຂຸດຂຸມຕາມແຄມແມ່ນ້ຳ ເພື່ອຈະໄດ້ນ້ຳດື່ມ, ແຕ່ພວກເຂົາດື່ມນ້ຳຈາກແມ່ນ້ຳນັ້ນບໍ່ໄດ້.
[25]ເຈັດວັນຜ່ານໄປຫລັງຈາກທີ່ພຣະຢາເວຊົງບັນດານໃຫ້ນ້ຳກາຍເປັນເລືອດແລ້ວ.


generated on Tue Jun 17 19:01:42 2025

## 8

[1]ແລ້ວພຣະຢາເວກ່າວກັບໂມເຊວ່າ, "ຈົ່ງໄປຫາຟາຣາໂອແລະບອກລາວວ່າ,'ພຣະຢາເວກ່າວດັ່ງນີ້ວ່າ:

"ຈົ່ງປ່ອຍປະຊາຊົນຂອງເຮົາໄປເພື່ອພວກເຂົາຈະໄດ້ນະມັດສະການເຮົາ.[2]ຖ້າເຈົ້າປະຕິເສດທີ່ຈະປ່ອຍພວກເຂົາໄປ,
ເຮົາຈະສົ່ງຝູງກົບຂຶ້ນມາເຮັດໃຫ້ເດືອດຮ້ອນທົ່ວດິນແດນຂອງເຈົ້າ.[3]ແມ່ນ້ຳຈະເຕັມໄປດ້ວຍຝູງກົບ. ພວກມັນຈະຂຶ້ນມາ
ແລະເຂົ້າໄປໃນເຮືອນຂອງເຈົ້າ, ໃນຫ້ອງນອນຂອງເຈົ້າ, ແລະຕຽງນອນຂອງເຈົ້າ.
ພວກມັນຈະເຂົ້າໄປໃນເຮືອນຂອງເຫລົ່າຂ້າຣາຊະການຂອງເຈົ້າ. ພວກມັນຈະຢູ່ຕາມຕົນໂຕປະຊາຊົນຂອງເຈົ້າ, ເຂົ້າໃນເຕົາອົບຂອງເຈົ້າ,
ແລະເຂົ້າໄປໃນຊາມປະສົມແປ້ງຂອງເຈົ້າ.[4]ຝູງກົບຈະຮຸກຮານເຈົ້າ, ປະຊາຊົນຂອງເຈົ້າ, ແລະຜູ້ຮັບໃຊ້ທັງຫມົດຂອງເຈົ້າ.'""

[5]ພຣະຢາເວກ່າວກັບໂມເຊວ່າ, "ເຈົ້າຈົ່ງບອກອາໂຣນ, 'ຈົ່ງຍົກມືຂອງເຈົ້າຂຶ້ນ ແລະ ຈົ່ງຍົກໄມ້ຄ້ອນເທົ້າເຫນືອແມ່ນ້ຳທັງຫລາຍ,
ຫ້ວຍຮ່ອງທັງຫລາຍ, ແລະສະນ້ຳທັງຫລາຍ,
ແລະຈະມີຝູງກົບທົ່ວແຜ່ນດິນອີຢິບ.'"[6]ອາໂຣນຈຶ່ງຍື່ນມືອອກເຫນືອນ້ຳທັງຫລາຍຂອງແຜ່ນດິນອີຢິບ, ແລະຝູງກົບກໍຂຶ້ນມາທົ່ວແຜ່ນດິນອີຢິບ.
[7]ແຕ່ພວກນັກມາຍາກົນກໍໃຊ້ເວດມົນຂອງຕົນເຊັ່ນດຽວກັນ: ພວກເຂົາເຮັດໃຫ້ຝູງກົບຂຶ້ນມາເຕັມທົ່ວແຜ່ນດິນອີຢິບຄືກັນ.
[8]ແລ້ວຟາຣາໂອຈຶ່ງເອີ້ນໂມເຊ ແລະອາໂຣນມາຫາ ແລະກ່າວວ່າ,
"ຈົ່ງອະທິຖານເຖິງພຣະຢາເວເພື່ອພຣະອົງຈະໄດ້ເອົາຝູງກົບອອກໄປຈາກເຮົາເສຍ ແລະປະຊາຊົນຂອງເຮົາ.
ແລ້ວເຮົາຈະປ່ອຍປະຊາຊົນຂອງເຈົ້າອອກໄປ, ເພື່ອຖວາຍເຄື່ອງບູຊາແດ່ພຣະອົງ."[9]ໂມເຊກ່າວແກ່ຟາຣາໂອວ່າ,
"ພະອົງມີສິດທິພິເສດທີ່ຈະບອກຂ້ານ້ອຍວ່າ ເມື່ອໃດຈະໃຫ້ຂ້ານ້ອຍອະທິຖານເພື່ອພະອົງ, ຂ້າຣາຊະການຂອງທ່ານ, ແລະປະຊາຊົນຂອງທ່ານ,
ເພື່ອທີ່ຈະຂັບໄລ່ຝູງກົບໄປຈາກພະອົງ ເຮືອນທັງຫລາຍຂອງພະອົງ ແລະ ເຫລືອຝູງກົບທີ່ຢູ່ແຕ່ໃນແມ່ນ້ຳເທົ່ານັ້ນ."
[10]ຟາຣາໂອກ່າວວ່າ, "ມື້ອື່ນ." ໂມເຊທູນຕອບວ່າ, "ຈະເປັນໄປຕາມທີ່ພະອົງກ່າວມານັ້ນ, ເພື່ອພະອົງຈະໄດ້ຮູ້ວ່າບໍ່ມີຜູ້ໃດ ເຫມືອນພຣະຢາເວ,
ພຣະເຈົ້າຂອງພວກເຮົາ.[11]ຝູງກົບຈະໄປຈາກພະອົງ, ຈາກເຮືອນຂອງພະອົງ, ຂ້າຣາຊະການຂອງພະອົງ, ແລະປະຊາຊົນຂອງພະອົງ.
ກົບຈະຢູ່ແຕ່ໃນແມ່ນ້ຳເທົ່ານັ້ນ."[12]ໂມເຊ ແລະອາໂຣນຈຶ່ງກັບອອກມາຈາກການເຝົ້າຟາຣາໂອ. ແລ້ວໂມເຊຮ້ອງຂໍຕໍ່ພຣະຢາເວກ່ຽວກັບຝູງກົບ
ທີ່ພຣະອົງນຳມາເພື່ອລົບກວນຟາຣາໂອ.
[13]ພຣະຢາເວໄດ້ເຮັດຕາມທີ່ໂມເຊທູນຂໍ: ຝູງກົບຈຶ່ງຕາຍຊະຊາຍຕາມບ້ານເຮືອນ, ລານເມືອງ, ແລະທົ່ງນາ.
[14]ປະຊາຊົນຈຶ່ງເອົາຊາກກົບມາສຸມເປັນກອງໆ, ແລະແຜ່ນດິນກໍສົ່ງກິ່ນເຫມັນໄປທົ່ວ.[15]ແຕ່ເມື່ອຟາຣາໂອເຫັນວ່າຄວາມທຸກຮ້ອນບັນເທົາລົງແລ້ວ,
ພະອົງກໍກັບມີໃຈແຂງກະດ້າງບໍ່ຍອມຮັບຟັງໂມເຊ ແລະ ອາໂຣນອີກ, ເປັນໄປຕາມທີ່ພຣະຢາເວໄດ້ກ່າວໄວ້ວ່າພະອົງຈະເປັນເຊັ່ນນັ້ນ.
[16]ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງບອກອາໂຣນວ່າ, 'ຈົ່ງຍື່ນໄມ້ຄ້ອນເທົ້າຂອງເຈົ້າອອກ ແລະຕີຝຸ່ນເທິງຫນ້າດິນ,
ແລ້ວຝຸ່ນເຫລົ່ານັ້ນຈະກາຍເປັນຮິ້ນທົ່ວແຜ່ນດິນອີຢິບ.'"[17]ພວກເຂົາກໍເຮັດຕາມເຊັ່ນນັ້ນ: ອາໂຣນຍື່ນມືທີ່ຖືໄມ້ຄ້ອນເທົ້າອອກ.
ແລ້ວລາວກໍໄດ້ຕີຝຸ່ນເທິງຫນ້າດິນ. ຝູງຮິ້ນຂຶ້ນມາຕອມຄົນ ແລະສັດ. ຝຸ່ນທັງຫມົດເທິງຫນ້າດິນກໍກາຍເປັນຝູງຮິ້ນທົ່ວແຜ່ນດິນອີຢິບ.
[18]ພວກນັກມາຍາກົນພະຍາຍາມຈະໃຊ້ເວດມົນຂອງຕົນ ເພື່ອຈະເຮັດໃຫ້ເກີດຮິ້ນ, ແຕ່ພວກເຂົາກໍເຮັດບໍ່ໄດ້. ຝູງຮິ້ນຕ່າງມາຕອມທັງຄົນ
ແລະສັດ.[19]ນັກມາຍາກົນຈຶ່ງທູນແກ່ຟາຣາໂອວ່າ, "ນີ້ເປັນຜົນຈາກນິ້ວພຣະຫັດຂອງພຣະເຈົ້າ." ແຕ່ໃຈຂອງຟາຣາໂອກັບແຂງກະດ້າງ,
ພະອົງປະຕິເສດທີ່ຈະຟັງພວກເຂົາອີກ. ເປັນໄປຕາມທີ່ພຣະຢາເວໄດ້ກ່າວໄວ້ວ່າຟາຣາໂອຈະເຮັດເຊັ່ນນັ້ນ.
[20]ພຣະຢາເວກ່າວກັບໂມເຊວ່າ, "ເຈົ້າຈົ່ງລຸກຂຶ້ນແຕ່ເຊົ້າມືດ ແລະ ໄປຢືນຢູ່ຕໍ່ຫນ້າຟາຣາໂອຕອນທີ່ລາວໄປທີ່ແມ່ນ້ຳ. ບອກກັບລາວວ່າ,
'ພຣະຢາເວກ່າວດັ່ງນີ້: ຈົ່ງປ່ອຍປະຊາຊົນຂອງເຮົາໄປເພື່ອພວກເຂົາຈະນະມັດສະການເຮົາ.[21]ແຕ່ຖ້າເຈົ້າບໍ່ຍອມປ່ອຍປະຊາຊົນຂອງເຮົາໄປ
ເຮົາຈະສົ່ງຝູງແມງວັນມາຕອມຕົນໂຕເຈົ້າ, ຂ້າຣາຊະການຂອງເຈົ້າ, ແລະປະຊາຊົນຂອງເຈົ້າ, ແລະເຂົ້າໄປໃນເຮືອນຂອງພວກເຈົ້າ.
ເຮືອນທັງຫລາຍຂອງຊາວອີຢິບຈະເຕັມໄປດ້ວຍແມງວັນ, ແລະແມ່ນແຕ່ພື້ນດິນບ່ອນທີ່ພວກເຈົ້າຢືນກໍຈະເຕັມໄປແມງວັນ.
[22]ແຕ່ໃນວັນນັ້ນເຮົາຈະເຮັດຕໍ່ດິນແດນໂກເຊັນແຕກຕ່າງໄປຈາກເດີມ, ຄືດິນແດນທີ່ປະຊາຊົນຂອງເຮົາອາໄສຢູ່, ຝູງແມງວັນຈະບໍ່ມີຢູ່ທີ່ນັ້ນເລີຍ.
ສິ່ງນີ້ຈະເກີດຂຶ້ນເພື່ອເຈົ້າຈະໄດ້ຮູ້ວ່າເຮົາຄືພຣະຢາເວ ສະຖິດຢູ່ທ່າມກາງແຜ່ນດິນນີ້.[23]ເຮົາຈະເຮັດໃຫ້ເກີດຄວາມແຕກຕ່າງລະຫວ່າງຂອງເຮົາ
ແລະ ປະຊາຊົນຂອງເຈົ້າ. ນີ້ເປັນຫມາຍສຳຄັນແຫ່ງຣິດອຳນາດຂອງເຮົາ ສິ່ງນີ້ຈະເກີດຂຶ້ນໃນມື້ອື່ນ.'""[24]ພຣະຢາເວເຮັດເຊັ່ນນັ້ນ,
ແລະຝູງແມງວັນຈຳນວນມະຫາສານເຂົ້າໄປໃນເຮືອນຂອງຟາຣາໂອ ແລະ ເຂົ້າໄປໃນເຮືອນຂອງຂ້າຣາຊະການທັງຫລາຍຂອງພຣະອົງ.
ທົ່ວທັງແຜ່ນດິນອີຢິບ, ທັງແຜ່ນດິນໄດ້ຖືກທຳລາຍ ເພາະຝູງແມງວັນນັ້ນ.
[25]ຟາຣາໂອຈຶ່ງເອີ້ນໃຫ້ໂມເຊ ແລະອາໂຣນມາເຂົ້າເຝົ້າ ແລະກ່າວວ່າ,
"ຈົ່ງໄປຖວາຍເຄື່ອງບູຊາແດ່ພຣະເຈົ້າຂອງເຈົ້າໃນດິນແດນຂອງເຮົາ."[26]ໂມເຊຕອບວ່າ, "ບໍ່ຖືກຕ້ອງສຳລັບຂ້ານ້ອຍທີ່ຈະເຮັດເຊັ່ນນັ້ນ,
ເພາະເຄື່ອງບູຊາທີ່ຂ້ານ້ອຍຖວາຍແດ່ພຣະຢາເວ ພຣະເຈົ້າຂອງພວກຂ້ານ້ອຍເປັນທີ່ລັງກຽດຂອງຊາວອີຢິບ.
ຫາກພວກຂ້ານ້ອຍຖວາຍເຄື່ອງບູຊາຊຶ່ງເປັນທີ່ຫນ້າລັງກຽດ ໃນສາຍຕາຂອງຊາວອີຢິບ,
ຈະບໍ່ຖືກພວກເຂົາເອົາກ້ອນຫີນຄວ່າງພວກຂ້ານ້ອຍຫລື?[27]ຢ່າໃຫ້ເປັນເຊັ່ນນັ້ນເລີຍ, ພວກຂ້ານ້ອຍຈຳເປັນຕ້ອງເດີນທາງສາມມື້
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ, ເພື່ອຖວາຍບູຊາແດ່ພຣະຢາເວພຣະເຈົ້າຂອງພວກຂ້ານ້ອຍ, ຕາມທີ່ພຣະອົງຊົງສັ່ງພວກຂ້ານ້ອຍນັ້ນ."
[28]ຟາຣາໂອກ່າວວ່າ, "ເຮົາຈະໃຫ້ພວກເຈົ້າໄປ ແລະຖວາຍເຄື່ອງບູຊາແດ່ພຣະຢາເວ ພຣະເຈົ້າຂອງເຈົ້າໃນຖິ່ນແຫ້ງແລ້ງກັນດານ.
ແຕ່ວ່າພວກເຈົ້າຈະຕ້ອງບໍ່ໄປໄກຫລາຍ. ຈົ່ງອະທິຖານໃຫ້ເຮົາດ້ວຍ."[29]ແລ້ວໂມເຊທູນວ່າ, "ທັນທີທີ່ຂ້ານ້ອຍຈາກໄປ
ຂ້ານ້ອຍຈະອະທິຖານຕໍ່ພຣະຢາເວວ່າ ຂໍໃຫ້ຝູງແມງວັນອອກໄປຈາກພະອົງ, ຟາຣາໂອ, ແລະຂ້າຣາຊະການ
ແລະປະຊາຊົນຂອງທ່ານພາຍໃນມື້ອື່ນ. ແຕ່ຂໍພະອົງຢ່າໄດ້ກັບຄຳທີ່ຈະປ່ອຍປະຊາຊົນຂອງຂ້ານ້ອຍທັງຫລາຍ
ໄປຖວາຍເຄື່ອງບູຊາແດ່ພຣະຢາເວອີກ."
[30]ແລ້ວໂມເຊຈຶ່ງລາຈາກຟາຣາໂອ ແລະອະທິຖານຕໍ່ພຣະຢາເວ.[31]ພຣະຢາເວເຮັດຕາມທີ່ໂມເຊທູນຂໍ:
ພຣະອົງໄດ້ເອົາຝູງແມງວັນອອກໄປຈາກຟາຣໂອ, ຂ້າຣາຊະການ, ແລະປະຊາຊົນຂອງພະອົງ. ບໍ່ເຫລືອແມ່ນແຕ່ໂຕດຽວ.[32]ແຕ່ເທື່ອນີ້ຟາຣາໂອ
ກໍມີໃຈແຂງກະດ້າງຄືເກົ່າ, ແລະບໍ່ຍອມປ່ອຍປະຊາຊົນໄປ.


generated on Tue Jun 17 19:01:42 2025

# 9

1ແລ້ວພຣະຢາເວກ່າວກັບໂມເຊວ່າ, "ຈົ່ງໄປຫາຟາຣາໂອ ແລະບອກລາວວ່າ, 'ພຣະຢາເວພຣະເຈົ້າຂອງຊາວເຮັບເຣີ, ກ່າວດັ່ງນີ້ວ່າ:
"ຈົ່ງປ່ອຍປະຊາຊົນຂອງເຮົາໄປເພື່ອພວກເຂົາຈະໄດ້ນະມັດສະການເຮົາ."2ແຕ່ຫາກເຈົ້າປະຕິເສດທີ່ຈະປ່ອຍພວກເຂົາໄປ,
ຖ້າເຈົ້າຍັງດຶງພວກເຂົາໄວ້,3ແລ້ວພຣະຫັດຂອງພຣະຢາເວຈະຢູ່ເໜືອຝູງສັດຂອງເຈົ້າໃນທົ່ງນາ ແລະເຮັດໃຫ້ຝູງມ້າ, ຝູງລໍ, ຝູງອູດ, ຝູງງົວ,
ຝູງແກະ, ແລະຝູງແບ້, ແລະເຮັດໃຫ້ເກີດໂຣກລະບາດທີ່ເປັນຕາຢ້ານຫລາຍ.
4ພຣະຢາເວຈະເຮັດຕໍ່ຝູງສັດຂອງຊາວອິສະຣາເອນແລະຂອງຊາວອີຢິບແຕກຕ່າງກັນ: ສັດຂອງຊາວອິສະຣາເອນຈະບໍ່ຕາຍເລີຍ.

5ພຣະຢາເວຫມົດກຳນົດເວລາ; ພຣະອົງກ່າວວ່າ, "ໃນມື້ອື່ນເຮົາຈະເຮັດສິ່ງນີ້ໃນແຜ່ນດິນ.""6ພຣະຢາເວຈຶ່ງໄດ້ເຮັດສິ່ງນີ້ໃນມື້ຕໍ່ມາ:
ຝູງສັດຂອງຊາວອີຢິບພາກັນລົ້ມຕາຍຫມົດ. ສ່ວນຝູງສັດຂອງຊາວອິສະຣາເອນບໍ່ຕາຍ, ແມ່ນແຕ່ໂຕດຽວ.7ຟາຣາໂອໄດ້ກວດສອບເບິ່ງ, ແລະ,
ເບິ່ງແມ, ວ່າສັດຂອງຊາວອິສະຣາເອນບໍ່ຕາຍແມ່ນແຕ່ໂຕດຽວ. ໃຈຂອງຟາຣາໂອຍັງແຂງກະດ້າງຄືເກົ່າ,
ສະນັ້ນພະອົງຈຶ່ງບໍ່ຍອມປ່ອຍປະຊາຊົນອິສະຣາເອນໄປ.
8ແລ້ວພຣະຢາເວກ່າວແກ່ໂມເຊ ແລະ ອາໂຣນ, "ຈົ່ງກຳຂີ້ເຖົ່າຈາກເຕົາຂຶ້ນມາໃຫ້ເຕັມກຳມື. ເຈົ້າ, ໂມເຊ,
ຕ້ອງຫວ່ານຂີ້ເຖົ່ານັ້ນຂຶ້ນໄປໃນອາກາດ ໃນຂະນະທີ່ຟາຣາໂອກຳລັງເຝົ້າເບິ່ງຢູ່.
9ຂີ້ເຖົ່ານັ້ນຈະກາຍເປັນຝຸ່ນລະອອງຈະປົກຄຸມໄປທົ່ວແຜ່ນດິນອີຢິບ. ພວກເຂົາຈະເກີດຕຸ່ມຝີ ແລະເຈັບປວດຕາມຕົນໂຕ ຕະຫລອດທັງຄົນ
ແລະສັດທັງຫມົດໃນອີຢິບ."10ດັ່ງນັ້ນໂມເຊ ແລະອາໂຣນຈຶ່ງນຳຂີ້ເຖົ່າຈາກເຕົາໄຟໄປນຳ ແລະຢືນຢູ່ຕໍ່ ຫນ້າຂອງຟາຣາໂອ.
ແລ້ວໂມເຊກໍໄດ້ຫວ່ານຂີ້ເຖົ່າຂຶ້ນໄປໃນອາກາດ. ຂີ້ເຖົ່ານັ້ນເຮັດໃຫ້ເກີດຕຸ່ມຝີ ແລະ ເຈັບປວດແຕກລາມທົ່ວໂຕທັງຄົນ ແລະ ສັດ.
11ບັນດານັກມາຍາກົນຕ່າງກໍບໍ່ອາດຕໍ່ຕ້ານໂມເຊໄດ້ເພາະຝີ, ເພາະຝີກໍໄດ້ຂຶ້ນທີ່ຕົວພວກເຂົາ ແລະ ຄືຊາວເອຢິບທັງຫລາຍດ້ວຍ.
12ພຣະຢາເວໄດ້ເຮັດໃຫ້ໃຈຂອງຟາຣາໂອແຂງກະດ້າງຢູ່, ດັ່ງນັ້ນຟາໂຣຈຶ່ງບໍ່ຍອມຟັງໂມເຊ ແລະ ອາໂຣນ.
ດັ່ງທີ່ພຣະຢາເວໄດ້ກ່າວແກ່ໂມເຊໄວ້ວ່າຟາຣາໂອຈະເຮັດຢ່າງນັ້ນ.
13ແລ້ວພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງລຸກຂຶ້ນແຕ່ເຊົ້າໆ, ໄປຢືນຢູ່ຕໍ່ຫນ້າຟາຣາໂອ, ແລະບອກລາວວ່າ, 'ພຣະຢາເວ,
ພຣະເຈົ້າຂອງຊາວເຮັບເຣີ, ກ່າວດັ່ງນີ້ວ່າ: "ຈົ່ງປ່ອຍປະຊາຊົນຂອງເຮົາເພື່ອເຂົາຈະໄດ້ນະມັດສະການເຮົາ.
14ຍ້ອນວ່າເທື່ອນີ້ເຮົາຈະສົ່ງທັງຫມົດພັຍພິບັດມາເຫນືອເຈົ້າທັງເຈົ້າເອງ, ເຫນືອຂ້າຣາຊະການຂອງເຈົ້າ ແລະປະຊາຊົນຂອງເຈົ້າ.
ເຮົາຈະເຮັດເຊັ່ນນີ້ເພື່ອເຈົ້າຈະໄດ້ຮູ້ວ່າທົ່ວແຜ່ນດິນໂລກນີ້ບໍ່ມີຜູ້ໃດສະເຫມີເທົ່ມອນເຮົາ.
15ບັດນີ້ ເຮົາສາມາດຢຽດມືອອກ ແລະໂຈມຕີເຈົ້າ ແລະປະຊາຊົນຂອງເຈົ້າດ້ວຍເຊື້ອໂຣກ, ແລະເຮົາຈະກວາດລ້າງເຈົ້າຈາກແຜ່ນດິນໄດ້.
16ແຕ່ດ້ວຍເຫດນີ້ເຮົາຈຶ່ງຍັງອະນຸຍາດໃຫ້ເຈົ້າຍັງມີຊີວິດຢູ່: ເພື່ອເຮົາຈະໄດ້ສຳແດງຣິດອຳນາດຂອງເຮົາແກ່ເຈົ້າ,
ເພື່ອວ່ານາມຂອງເຮົາຈະຊ່າລືໄປທົ່ວໂລກ.17ເຈົ້າຍັງຖືສິດຕໍ່ສູ້ປະຊາຊົນຂອງເຮົາ ໂດຍບໍ່ຍອມປ່ອຍປະຊາຊົນຂອງເຮົາພວກເຂົາໄປ.
18ຈົ່ງຟັງ! ໃນມື້ອື່ນເວລາດຽວກັນນີ້ ເຮົາຈະສົ່ງພາຍຸຫມາກເຫັບຕົກມາຢ່າງຮຸນແຮງ, ຊຶ່ງບໍ່ເຄີຍເຫັນມາກ່ອນໃນອີຢິບ
ຕັ້ງແຕ່ວັນທີ່ມັນເລີ່ມຕົ້ນຈົນເຖິງດຽວນີ້.19ບັດນີ້, ຈົ່ງສົ່ງຄົນ ແລະຕ້ອນຝູງສັດ ແລະນຳທຸກສິ່ງທີ່ເຈົ້າມີໃນທົ່ງນາເຂົ້າໃນບ່ອນປອດພັຍ.
ເພາະຄົນທຸກຄົນແລະສັດທຸກໂຕທີ່ຍັງບໍ່ເຂົ້າມາໃນເຮືອນ—ຈະຖືກຫມາກເຫັບຕົກໃສ່ພວກເຂົາ, ແລະພວກເຂົາຈະຕາຍ.""
20ຈາກນັ້ນບັນດາຂ້າຣາຊະການຂອງຟາຣາໂອ ຜູ້ທີ່ເຊື່ອຟັງຖ້ອຍຄຳຂອງພຣະຢາເວກໍຮີບນຳຂ້າທາດ ແລະ ຝູງສັດເຂົ້າມາຢູ່ໃນເຮືອນ.
21ແຕ່ຜູ້ທີ່ບໍ່ສົນໃຈຖ້ອຍຄຳຂອງພຣະຢາເວ ກໍປ່ອຍຂ້າທາດທັງຫມົດຂອງພວກເຂົາ ແລະ ຝູງສັດໄວ້ໃນທົ່ງນາ.
22ແລ້ວພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງຢຽດມືຂອງເຈົ້າຂຶ້ນສູ່ທ້ອງຟ້າ ເພື່ອວ່າຈະມີຫມາກເຫັບຕົກທົ່ວແຜ່ນດິນອີຢິບ, ເທິງຄົນ,
ເທິງສັດທັງຫລາຍ, ແລະເທິງພືດພັນທັງຫມົດທີ່ຢູ່ໃນທົ່ງນາທົ່ວແຜ່ນດິນອີຢິບ."23ໂມເຊຈຶ່ງຍົກໄມ້ຄ້ອນເທົ້າຂຶ້ນສູ່ຟ້າ, ແລະພຣະຢາເວສົ່ງຟ້າຜ່າ,
ສົ່ງຫມາກເຫັບ, ແລະສົ່ງຟ້າແມບມາຍັງແຜ່ນດິນ. ພຣະອົງຈຶ່ງໄດ້ເຮັດໃຫ້ຝົນຫມາກເຫັບຕົກລົງໃນແຜ່ນດິນອີຢິບ.24ດັ່ງນັ້ນຈຶ່ງມີຫມາກເຫັບ
ແລະ ມີຟ້າແມບປົນກັບຫມາກເຫັບຢ່າງຮຸນແຮງ, ຢ່າງທີ່ບໍ່ເຄີຍມີມາກ່ອນໃນແຜ່ນດິນອີຢິບນັບຕັ້ງແຕ່ເລີ່ມເປັນປະເທດຊາດມາ.
25ທົ່ວທັງແຜ່ນດິນອີຢິບ, ຫມາກເຫັບໄດ້ຕົກມາທຳລາຍທຸກສິ່ງທີ່ຢູ່ໃນທົ່ງນາ, ທັງຄົນ ແລະສັດທັງຫລາຍ. ມັນຕົກມາຖືກພືດພັນທັງຫມົດໃນທົ່ງນາ
ແລະຫັກຕົ້ນໄມ້ທຸກຕົ້ນ.26ເວັ້ນໄວ້ແຕ່ແຜ່ນດິນໂກເຊັນ, ບ່ອນທີ່ຊາວອິສະຣາເອນອາໄສຢູ່, ບໍ່ມີຫມາກເຫັບຕົກໃສ່ເລຍ.
27ແລ້ວຟາຣາໂອຈຶ່ງສົ່ງຄົນໄປເອີ້ນໃຫ້ໂມເຊ ແລະອາໂຣນເຂົ້າເຝົ້າ, ພະອົງກ່າວກັບພວກເຂົາວ່າ, "ໃນຄາວນີ້ເຮົາໄດ້ເຮັດບາບ.
ພຣະຢາເວເປັນຝ່າຍຖືກ, ແລະເຮົາ ແລະປະຊາຊົນຂອງເຮົາເປັນຝ່າຍຜິດ.28ຈົ່ງອ້ອນວອນພຣະຢາເວ, ເພາະຟ້າຜ່າທີ່ຮຸນແຮງ
ແລະຫມາກເຫັບທີ່ຫລາຍເກີນໄປ, ແລ້ວເຮົາຈະປ່ອຍພວກເຈົ້າໄປ, ແລະພວກເຈົ້າບໍ່ຕ້ອງຢູ່ອີກຕໍ່ໄປ."
29ໂມເຊທູນກັບຟາຣາໂອວ່າ, "ທັນທີທີ່ຂ້ານ້ອຍອອກຈາກເມືອງໄປແລ້ວ, ຂ້ານ້ອຍຈະຍົກມືຕໍ່ພຣະຢາເວ, ແລ້ວຟ້າຮ້ອງຈະງຽບ,
ແລະຈະບໍ່ມີຫມາກເຫັບຕົກອີກ. ເພື່ອວ່າພະອົງຈະໄດ້ຮູ້ວ່າໂລກນີ້ເປັນຂອງພຣະຢາເວ.30ແຕ່ຝ່າຍທ່ານກັບຂ້າຣາຊະການນັ້ນ,
ຂ້ານ້ອຍກໍຮູ້ຢູ່ແລ້ວວ່າ ທ່ານຍັງຄົງບໍ່ຢຳເກງພຣະເຈົ້າ ພຣະຢາເວ."
31ບັດນີ້ຕົ້ນປ່ານ ແລະເຂົ້າບາເລກໍຖືກທຳລາຍແລ້ວ, ເພາະເຂົ້າບາເລຊູຮວງແລ້ວ, ແລະຕົ້ນປ່ານກໍກຳລັງອອກດອກ.32ແຕ່ເຂົ້າບາເລ
ແລະເຂົ້າປ່ານບໍ່ໄດ້ຖືກທຳລາຍຫມົດ ເພາະພວກມັນເປັນພືດຮຸ້ນຫລັງ.33ເມື່ອໂມເຊຈາກຟາຣາໂອ ແລະອອກໄປນອກເມືອງ,
ລາວໄດ້ຍົກມືຂຶ້ນຟ້າຕໍ່ພຣະຢາເວ; ຟ້າຮ້ອງ ແລະຫມາກເຫັບກໍຢຸດ, ແລະບໍ່ມີຝົນຕົກລົງມາອີກ.
34ເມື່ອຟາຣາໂອເຫັນວ່າຝົນ, ຫມາກເຫັບ, ແລະຟ້າຮ້ອງສະຫງົບລົງແລ້ວ, ພະອົງກໍເຮັດບາບອີກ ແລະເຮັດໃຈຂອງພະອົງແຂງກະດ້າງ,
ລວມທັງຂ້າຣາຊະການຂອງພະອົງດ້ວຍ.35ໃຈຂອງຟາຣາໂອແຂງກະດ້າງ, ດັ່ງນັ້ນພະອົງຈຶ່ງບໍ່ຍອມໃຫ້ປະຊາຊົນອິສະຣາເອນໄປ.
ນີ້ຄືສິ່ງທີ່ພຣະຢາເວໄດ້ກ່າວໄວ້ກັບໂມເຊເຖິງສິ່ງທີ່ຟາຣາໂອຈະເຮັດ.

 generated on Tue Jun 17 19:01:42 2025

10 1ພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງໄປຫາຟາຣາໂອ, ເພາະເຮົາໄດ້ເຮັດໃຫ້ໃຈຂອງລາວ
ແລະໃຈຂອງບັນດາຂ້າຣາຊະການຂອງລາວແຂງກະດ້າງ. ເຮົາໄດ້ເຮັດສິ່ງນີ້ເພື່ອສະແດງຫມາຍສຳຄັນ
ເຫລົ່ານີ້ແຫ່ງຣິດອຳນາດຂອງເຮົາທ່າມກາງພວກເຂົາ. 2ເຮົາໄດ້ເຮັດໃນສິ່ງນີ້ເພື່ອວ່າເຈົ້າຈະໄດ້ເລົ່າແກ່ລູກ ແລະ ຫລານເຖິງສິ່ງທີ່ເຮົາໄດ້ເຮັດ,
ເຖິງວິທີທີ່ເຮົາໄດ້ເຮັດຕໍ່ຊາວອີຢິບຢ່າງຮຸນແຮງ, ແລະວິທີທີ່ເຮົາໄດ້ເຮັດຫມາຍສຳຄັນຕ່າງໆ ແຫ່ງຣິດອຳນາດຂອງເຮົາທ່າມກາງພວກເຂົາ.
ດ້ວຍວິທີນີ້ພວກເຈົ້າຈະຮູ້ວ່າ ເຮົາຄືພຣະຢາເວ."

3ດັ່ງນັ້ນໂມເຊ ແລະ ອາໂຣນຈຶ່ງເຂົ້າເຝົ້າຟາຣາໂອ ແລະ ໄດ້ກ່າວກັບພະອົງວ່າ, "ພຣະຢາເວ, ພຣະເຈົ້າຂອງຊາວເຮັບເຣີ, ກ່າວດັ່ງນີ້ວ່າ:
'ເຈົ້າຈະປະຕິເສດທີ່ຈະຖ່ອມຕົວຕໍ່ເຮົາອີກດົນປານໃດ? ຈົ່ງປ່ອຍປະຊາຊົນຂອງເຮົາໄປເພື່ອນະມັດສະການເຮົາ.
4ແຕ່ຖ້າເຈົ້າປະຕິເສດທີ່ຈະປ່ອຍປະຊາຊົນຂອງເຮົາໄປ, ຈົ່ງຟັງ, ໃນມື້ອື່ນເຮົາຈະທຳໃຫ້ຝູງຕັກແຕນເຂົ້າມາໃນດິນແດນຂອງເຈົ້າ.
5ພວກມັນຈະປົກຄຸມພື້ນດິນເຕັມໄປຫມົດ ຈົນບໍ່ມີໃຜສາມາດເຫັນພື້ນດິນ. ພວກມັນຈະກິນສິ່ງໃດກໍຕາມທີ່ເຫລືອຈາກຫມາກເຫັບທຳລາຍ.
ພວກມັນຈະກິນຕົ້ນໄມ້ທຸກຕົ້ນ ຊຶ່ງໃຫຍ່ຂຶ້ນເພື່ອເຈົ້າຈະໄດ້ກິນໃນທົ່ງນາດ້ວຍ. 6ພວກມັນຈະເຂົ້າໄປໃນເຮືອນຂອງເຈົ້າ,
ຂອງຂ້າຣາຊະການທຸກຄົນຂອງເຈົ້າ, ແລະຂອງຊາວອີຢິບ—ໃນສິ່ງທີ່ພໍ່ ຫລືປູ່ຂອງເຈົ້າບໍ່ເຄີຍເຫັນເລີຍ,
ຕັ້ງແຕ່ມື້ທີ່ພວກເຂົາອາໄສໃນແຜ່ນດິນມາຈົນເຖິງທຸກມື້ນີ້.'" ແລ້ວໂມເຊກໍຈາກໄປ ແລະອອກຈາກຟາຣາໂອ.
7ບັນດາຂ້າຣາຊະການຂອງຟາຣາໂອກ່າວແກ່ທ່ານວ່າ, "ຊາຍຄົນນີ້ຈະເປັນຜູ້ຄຸກຄາມເຮົາອີກດົນປານໃດ?
ຂໍປ່ອຍຊາວອິສະຣາເອນໄປນະມັດສະການ ພຣະຢາເວພຣະເຈົ້າຂອງພວກເຂົາ. ພຣະອົງຍັງບໍ່ຮູ້ບໍ່ວ່າອີຢິບຈະຈິບຫາຍແລ້ວ? 8ໂມເຊ ແລະ
ອາໂຣນຖືກນຳຕົວເຂົ້າມາເຝົ້າຟາຣາໂອອີກ, ຜູ້ຊຶ່ງໄດ້ກ່າວແກ່ພວກເຂົາວ່າ, "ຈົ່ງໄປນະມັດສະການພຣະຢາເວພຣະເຈົ້າຂອງເຈົ້າ.
ແຕ່ໃຜແດ່ຈະໄປ?"
9ໂມເຊກ່າວວ່າ, "ພວກຂ້ານ້ອຍຈະໄປກັບຄົນຫນຸ່ມ ແລະກັບຜູ້ອາວຸໂສ, ບັນດາລູກຊາຍ ແລະລູກສາວ.
ພວກເຮົາຈະໄປກັບຝູງແກະແບ້ແລະຝູງງົວ,
ເພາະພວກຂ້ານ້ອຍຈະຕ້ອງຈັດງານລ້ຽງຖວາຍແດ່ພຣະຢາເວ." 10ຟາຣາໂອກ່າວແກ່ພວກເຂົາວ່າ,"ຂໍພຣະຢາເວຈົ່ງສະຖິດຢູ່ກັບພວກເຈົ້າ,
ຖ້າຂ້ອຍໃຫ້ພວກເຈົ້າໄປ ແລະລູກຫລານຂອງເຈົ້າໄປດ້ວຍ. ເບິ່ງເຖີດ, ເຈົ້າຕ້ອງມີຄວາມຊົ່ວຮ້າຍບາງຢ່າງໃນໃຈ. 11ບໍ່ໄດ້! ຈົ່ງໄປ,
ໄດ້ສະເພາະຜູ້ຊາຍທ່າມກາງພວກເຈົ້າ, ແລະນະມັດສະການພຣະຢາເວ, ເພາະນີ້ຄືສິ່ງທີ່ເຈົ້າຕ້ອງການ." ແລ້ວໂມເຊ
ແລະອາໂຣນກໍຖືກຂັບໄລ່ໄປໃຫ້ພົ້ນຫນ້າຂອງຟາຣາໂອ.
12ແລ້ວພຣະຢາເວຈຶ່ງກ່າວກັບໂມເຊວ່າ, "ຈົ່ງຍົກມືຂຶ້ນສູ່ທ້ອງຟ້າເຫນືອແຜ່ນດິນອີຢິບໄປຍັງຝູງຕັກແຕນ,
ເພື່ອພວກມັນຈະໄດ້ໂຈມຕີແຜ່ນດິນອີຢິບ ແລະກິນພືດພັນທຸກຢ່າງ,
ຄືທຸກຢ່າງທີ່ເຫລືອຈາກຫມາກເຫັບທຳລາຍນັ້ນ." 13ໂມເຊຈຶ່ງຍົກໄມ້ຄ້ອນເທົ້າຂອງເຂົາອອກເຫນືອແຜ່ນດິນອີຢິບ,
ແລະພຣະຢາເວກໍນຳລົມຕາເວັນອອກພັດມາເຫນືອແຜ່ນດິນຕະຫລອດທັງກາງເວັນ ແລະ ກາງຄືນ. ເມື່ອເຖິງຕອນເຊົ້າ,
ລົມຕາເວັນອອກກໍພັດຝູງຕັກແຕນມາ.
14ຝູງຕັກແຕນໄປທົ່ວແຜ່ນດິນອີຢິບ ແລະ ເກາະຢູ່ທົ່ວທຸກສ່ວນຂອງອີຢິບ. ບໍ່ເຄີຍມີຕັກແຕນຝູງໃຫຍ່ໃນແຜ່ນດິນຢ່າງນີ້ມາກ່ອນເລີຍ,
ແລະຫລັງຈາກນີ້ຈະບໍ່ມີເຫດການຢ່າງນີ້ອີກເລີຍ. 15ພວກມັນປົກຄຸມທົ່ວແຜ່ນດິນທັງຫມົດ ຈົນເຮັດໃຫ້ທຸກຢ່າງມືດໄປ.
ພວກມັນກິນພືດພັນທຸກຢ່າງໃນແຜ່ນດິນ ແລະ ຫມາກໄມ້ຈາກຕົ້ນທັງຫມົດຊຶ່ງເຫລືອຈາກຫມາກເຫັບທຳລາຍ. ທົ່ວທັງແຜ່ນດິນອີຢິບນັ້ນ,
ຈະບໍ່ມີພືດໃບຂຽວສົດເຫລືອເລີຍ, ບໍ່ວ່າຕົ້ນໄມ້ຫລືພືດພັນໃດໆໃນທົ່ງນາ.
16ແລ້ວຟາຣາໂອຈຶ່ງຮີບໃຫ້ໂມເຊ ແລະ ອາໂຣນເຂົ້າເຝົ້າແລ້ວກ່າວວ່າ, "ເຮົາໄດ້ເຮັດບາບຕໍ່ພຣະຢາເວພຣະເຈົ້າຂອງເຈົ້າ ແລະຕໍ່ເຈົ້າດ້ວຍ.
17ບັດນີ້, ຂໍເຈົ້າຍົກໂທດບາບຂອງເຮົາເທື່ອນີ້ດ້ວຍ, ແລະອະທິຖານຕໍ່ພຣະຢາເວພຣະເຈົ້າຂອງເຈົ້າ
ເພື່ອວ່າພຣະອົງຈະໃຫ້ຄວາມຜ່ານພົ້ນໄປຈາກເຮົາ." 18ດັ່ງນັ້ນໂມເຊຈຶ່ງໄປຈາກຟາຣາໂອ ແລະ ອະທິຖານຕໍ່ພຣະຢາເວ.
19ພຣະຢາເວຈຶ່ງນຳລົມຕາເວັນຕົກທີ່ຮຸນແຮງຫລາຍມາ ພັດເອົາຝູງຕັກແຕນ ແລະໄປຕົກໃນທະເລແດງ;
ຈົນບໍ່ເຫລືອຕັກແຕນແມ່ນແຕ່ໂຕດຽວທົ່ວເຂດແດນອີຢິບ. 20ແຕ່ພຣະຢາເວໄດ້ເຮັດໃຫ້ໃຈຂອງຟາຣາໂອແຂງກະດ້າງ,
ແລະຟາຣາໂອຈຶ່ງບໍ່ຍອມປ່ອຍຊາວອິສະຣາເອນໄປ.
21ແລ້ວພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງຍົກມືຂອງເຈົ້າຂຶ້ນສູ່ທ້ອງຟ້າ, ເພື່ອຈະໃຫ້ຄວາມມືດທົ່ວແຜ່ນດິນອີຢິບ
ເປັນຄວາມມືດຈົນຕ້ອງໃຊ້ມືລູບຄຳໄປ. 22ໂມເຊຈຶ່ງຍົກມືຂຶ້ນສູ່ທ້ອງຟ້າ, ແລະກໍມີຄວາມມືດຫນາທົ່ວແຜ່ນດິນອີຢິບສາມມື້.
23ພວກເຂົາເບິ່ງກັນບໍ່ເຫັນເລີຍ; ບໍ່ມີໃຜລຸກໄປຈາກເຮືອນຂອງຕົນຕະຫລອດທັງສາມມື້. ເຖິງຢ່າງໃດກໍດີ,
ບັນດາຊາວອິສະຣາເອນທຸກຄົນໄດ້ມີແສງສະຫວ່າງຢູ່ໃນບ່ອນທີ່ພວກເຂົາອາໄສນັ້ນ.
24ຟາຣາໂອເອີ້ນໂມເຊເຂົ້າເຝົ້າ ແລະກ່າວວ່າ, "ຈົ່ງໄປນະມັດສະການພຣະຢາເວເຖີດ, ແຕ່ໃຫ້ຄອບຄົວໄປກັບພວກເຈົ້າ, ແຕ່ຝູງແກະ
ແລະແບ້ຈະຕ້ອງຢູ່ທີ່ນີ້." 25ແຕ່ໂມເຊຕອບວ່າ, "ທ່ານຕ້ອງມອບເຄື່ອງບູຊາໃຫ້ແກ່ພວກຂ້ານ້ອຍ ແລະເຄື່ອງເຜົາບູຊາດ້ວຍ
ເພື່ອພວກຂ້ານ້ອຍຈະໄດ້ຖວາຍບູຊາແດ່ພຣະຢາເວພຣະເຈົ້າຂອງພວກຂ້ານ້ອຍ. 26ຝູງສັດຂອງພວກຂ້ານ້ອຍຈະຕ້ອງໄປກັບພວກຂ້ານ້ອຍດ້ວຍ;
ດ້ວຍວ່າພວກຂ້ານ້ອຍຈະຕ້ອງເອົາສັດຈາກຝູງໄປຖວາຍພຣະຢາເວ ພຣະເຈົ້າຂອງພວກຂ້ານ້ອຍ.
ດ້ວຍວ່າພວກຂ້ານ້ອຍຍັງບໍ່ຮູ້ວ່າຈະຕ້ອງເອົາສັດໄປຖວາຍພຣະຢາເວ ຈົນກວ່າຈະເຖິງທີ່ນັ້ນກ່ອນ."
27ແຕ່ພຣະຢາເວເຮັດໃຫ້ໃຈຂອງຟາຣາໂອແຂງກະດ້າງຢູ່ຄືເກົ່າ, ແລະ ພະອົງຈຶ່ງບໍ່ຍອມປ່ອຍພວກເຂົາໄປ 28ຟາຣາໂອ ໄດ້ອອກຄຳສັ່ງຕໍ່ໂມເຊວ່າ,
"ຈົ່ງໄປໃຫ້ພົ້ນຈາກຂ້ອຍ, ຣະວັງຕົວໃຫ້ດີ, ຢ່າມາໃຫ້ຂ້ອຍເຫັນຫນ້າອີກ, ຖ້າຂ້ອຍເຫັນຫນ້າເຈົ້າມື້ໃດ, ເຈົ້າຈະຕາຍມື້ນັ້ນ." 29ໂມເຊຈຶ່ງຕອບວ່າ,
"ພະອົງເປັນຜູ້ກ່າວແລ້ວເດີ, ຂ້ານ້ອຍຈະບໍ່ມາໃຫ້ພະອົງເຫັນຫນ້າອີກເລີຍ."

 generated on Tue Jun 17 19:01:42 2025

11 1ແລ້ວພຣະຢາເວໄດ້ກ່າວກັບໂມເຊວ່າ, "ຍັງມີພັຍພິບັດອີກຢ່າງຫນຶ່ງມາສູ່ຟາຣາໂອ ແລະ ອີຢິບ. ຫລັງຈາກນັ້ນ,
ລາວຈະປ່ອຍພວກເຈົ້າໄປຈາກທີ່ນີ້. ສຸດທ້າຍເມື່ອລາວປ່ອຍພວກເຈົ້າໄປ, ລາວຈະຂັບໄລ່ພວກເຈົ້າອອກຈົນຫມົດ.
2ຈົ່ງບອກປະຊາຊົນທຸກຄົນທັງຊາຍ ແລະ ຍິງ ຂໍເອົາເຄື່ອງເງິນ ແລະ ເຄື່ອງຄຳຈາກເພື່ອນບ້ານຂອງຕົນ."3ບັດນີ້
ພຣະຢາເວເຮັດໃຫ້ຊາວອີຢິບພໍໃຈຊາວອິສະຣາເອນ. ຫລາຍໄປກວ່ານັ້ນ,
ໂມເຊກໍເປັນທີ່ນັບຖືຫລາຍໃນສາຍຕາຂອງຂ້າຣາຊະການຂອງຟາຣາໂອ ແລະຂອງປະຊາຊົນອີຢິບດ້ວຍ.

4ໂມເຊທູນກ່າວວ່າ, "ພຣະຢາເວໄດ້ກ່າວດັ່ງນີ້ວ່າ: 'ເວລາປະມານທ່ຽງຄືນ ເຮົາຈະອອກໄປທົ່ວແຜ່ນດິນອີຢິບ.
5ລູກກົກທັງຫມົດໃນແຜ່ນດິນອີຢິບຈະຕາຍ, ຕັ້ງແຕ່ລູກກົກຂອງຟາຣາໂອ, ຜູ້ທີ່ນັ່ງເທິງບັນລັງ, ຈົນເຖິງລູກກົກຂອງທາດຍິງຜູ້ຢູ່ຫລັງເຄື່ອງໂມ້ແປ້ງ,
ແລະລູກຂອງສັດເກີດກ່ອນທັງຫມົດດ້ວຍ.
6ແລ້ວຈະມີການຮ້ອງໃຫ້ສຽງດັງທົ່ວແຜ່ນດິນເອຢິບ, ຢ່າງບໍ່ເຄີຍມີມາກ່ອນ ຕໍ່ໄປພາຍຫນ້າຈະບໍ່ມີອີກເລີຍ.
7ແຕ່ຈະບໍ່ມີແມ່ນແຕ່ສຽງຫມາເຫົ່າໃດໆຕໍ່ສູ້ປະຊາຊົນອິສະຣາເອນ, ບໍ່ວ່າຄົນຫລືສັດ. ໂດຍວິທີນີ້ເຈົ້າຈະຮູ້ວ່າ ເຮົາຈະປະຕິບັດຕໍ່ຊາວອີຢິບ ແລະ
ຊາວອິສະຣາເອນແຕກຕ່າງກັນ.'8ເຫລົ່າຂ້າຣາຊະການທັງຫມົດຂອງເຈົ້າ, ຟາຣາໂອ, ຈະລົງມາຫາເຮົາ ແລະກາບລົງຕໍ່ເຮົາ.
ພວກເຂົາຈະເວົ້າວ່າ, 'ຈົ່ງໄປ, ທັງເຈົ້າ ແລະປະຊາຊົນທັງຫມົດຜູ້ຕິດຕາມເຈົ້າມາດ້ວຍ!' ຫລັງຈາກນັ້ນຂ້ານ້ອຍກໍຈະອອກໄປ."
ແລ້ວລາວໄດ້ທູນລາຈາກຟາຣາໂອໄປດ້ວຍຄວາມໂກດຮ້າຍຢ່າງໃຫຍ່.
9ພຣະຢາເວໄດ້ກ່າວກັບໂມເຊວ່າ, "ຟາຣາໂອຈະບໍ່ຍອມຟັງພວກເຈົ້າ.
ນີ້ກໍເພື່ອການທີ່ເຮົາຈະເຮັດການອັດສະຈັນຫລາຍຂຶ້ນໃນແຜ່ນດິນອີຢິບ."10ໂມເຊ
ແລະອາໂຣນໄດ້ເຮັດການອັດສະຈັນເຫລົ່ານີ້ທັງຫມົດຕໍ່ຫນ້າຂອງຟາຣາໂອ. ແຕ່ພຣະຢາເວໄດ້ເຮັດໃຫ້ໃຈຂອງຟາຣາໂອແຂງກະດ້າງຢູ່ຄືເກົ່າ,
ແລະ ຟາຣາໂອຈຶ່ງບໍ່ຍອມປ່ອຍປະຊາຊົນອິສະຣາເອນໃຫ້ອອກໄປຈາກແຜ່ນດິນຂອງພະອົງ.


generated on Tue Jun 17 19:01:42 2025

12 [1]ພຣະຢາເວໄດ້ກ່າວແກ່ໂມເຊໃນແຜ່ນດິນອີຢິບ. ພຣະອົງກ່າວວ່າ,[2]ສຳລັບພວກເຈົ້າ, ເດືອນນີ້ຈະເປັນເດືອນເລີ່ມຕົ້ນ,
ເປັນເດືອນທຳອິດຂອງປີສຳລັບພວກເຈົ້າ.

[3]ຈົ່ງສັ່ງໃນທີ່ຊຸມນຸມຊາວອິສະຣາເອນວ່າ, 'ໃນວັນທີສິບເດືອນນີ້ ໃຫ້ພວກເຂົາແຕ່ລະຄົນເອົາລູກແກະ ຫລືແບ້ຫນຸ່ມໂຕຫນຶ່ງສຳລັບພວກເຂົາ,
ແຕ່ລະຄອບຄົວຈົ່ງເຮັດຢ່າງນີ້ຄື, ລູກແກະຄອບຄົວລະຫນຶ່ງໂຕ.[4]ຖ້າຄອບຄົວໃດມີຄົນຫນ້ອຍເກີນໄປສຳລັບລູກແກະຫນຶ່ງໂຕ, ກໍໃຫ້ຊາຍຄົນນັ້ນ
ແລະເພື່ອນບ້ານຂອງລາວ ເອົາຊີ້ນລູກແກະ ຫລືແບ້ຫນຸ່ມທີ່ຈະພຽງພໍສຳລັບຈຳນວນຄົນ. ຄືຈະຕ້ອງພຽງພໍສຳລັບທຸກຄົນທີ່ຈະກິນ,
ດັ່ງນັ້ນພວກເຂົາຈະຕ້ອງເອົາຊີ້ນຢ່າງພຽງພໍທີ່ຈະລ້ຽງພວກເຂົາທັງຫມົດ.
[5]ລູກແກະ ຫລືແບ້ຫນຸ່ມຂອງເຈົ້າຕ້ອງປາສະຈາກຕຳຫນິ, ໂຕຜູ້ອາຍຸຫນຶ່ງປີ. ພວກເຈົ້າອາດເອົາແກະ ຫລືແບ້ມາໂຕຫນຶ່ງກໍໄດ້.
[6]ພວກເຈົ້າຕ້ອງເບິ່ງແຍງມັນຈົນຮອດມື້ທີສິບສີ່ຂອງເດືອນນັ້ນ. ແລ້ວໃຫ້ຊຸມນຸມຊາວອິສະຣາເອນທັງຫມົດ
ຕ້ອງຂ້າສັດເຫລົ່ານັ້ນໃນຕອນໃກ້ຈະຄ່ຳ.[7]ພວກເຈົ້າຕ້ອງເອົາເລືອດບາງສ່ວນມາ ແລະທາເທິງປະຕູທັງສອງຂ້າງ
ແລະດ້ານເທິງຂອງຮອບປະຕູຂອງບ້ານທີ່ພວກເຈົ້າຈະກິນຊີ້ນນັ້ນ.[8]ພວກເຈົ້າຕ້ອງກິນຊີ້ນຄືນນັ້ນຫລັງຈາກປີ້ງໃສ່ໄຟກ່ອນ.
ກິນຊີ້ນກັບເຂົ້າຈີ່ບໍ່ມີເຊື້ອແປງ, ພ້ອມກັບຜັກຂົມ.
[9]ຢ່າກິນຊີ້ນດິບ ຫລືຕົ້ມໃນນ້ຳ. ແຕ່ຈົ່ງປີ້ງແທນ, ຄືປີ້ງສ່ວນຫົວ, ສ່ວນຂາ ແລະ ສ່ວນເຄື່ອງໃນຂອງມັນໄປແທນ.
[10]ພວກເຈົ້າຕ້ອງກິນບໍ່ໃຫ້ເຫລືອໄວ້ຮອດຕອນເຊົ້າ. ພວກເຈົ້າຕ້ອງເຜົາເສຍ ຖ້າຍັງມີເສດເຫລືອຮອດຕອນເຊົ້າ.[11]ນີ້ເປັນວິທີທີ່ພວກເຈົ້າຈະກິນມັນ:
ໃຫ້ໃສ່ສາຍແອວຂອງພວກເຈົ້າກຽມພ້ອມ, ໃສ່ເກີບທີ່ຕີນຂອງພວກເຈົ້າ, ແລະ ຖືໄມ້ຄ້ອນເທົ້າໄວ້ໃນມື. ພວກເຈົ້າຕ້ອງຟ້າວກິນຢ່າງເລັ່ງດ່ວນ.
ນີ້ແມ່ນການກິນປັດສະຄາຂອງພຣະຢາເວ.
[12]ພຣະຢາເວກ່າວດັ່ງນີ້ວ່າ: ເຮົາຈະຜ່ານເຂົ້າໃນແຜ່ນດິນອີຢິບໃນຄືນນັ້ນ ແລະ ຂ້າລູກກົກຂອງຄົນ ແລະ ສັດທັງຫມົດໃນແຜ່ນດິນອີຢິບ.
ເຮົາຈະນຳການລົງໂທດມາຍັງບັນດາພະຂອງອີຢິບທັງຫມົດ. ເຮົາຄືພຣະຢາເວ.[13]ເລືອດຈະເປັນເຄື່ອງຫມາຍຢູ່ທີ່ເຮືອນຂອງພວກເຈົ້າ.
ເມື່ອເຮົາມາຫາພວກເຈົ້າ. ເມື່ອເຮົາເຫັນເລືອດນັ້ນ, ເຮົາຈະຜ່ານພວກເຈົ້າໄປໃນຂະນະທີ່ເຮົາໂຈມຕີແຜ່ນດິນອີຢິບ.
ພັຍພິບັດນີ້ຈະບໍ່ເກີດຂຶ້ນກັບພວກເຈົ້າ ແລະ ບໍ່ທຳລາຍພວກເຈົ້າ.[14]ມື້ນີ້ຈະກາຍເປັນມື້ທີ່ລະນຶກເຖິງສຳລັບພວກເຈົ້າ,
ພວກເຈົ້າຈະຕ້ອງຖືປະຕິບັດໃຫ້ເປັນເທສະການສຳລັບພຣະຢາເວ. ມັນກໍຈະເປັນບັນຍັດສຳລັບພວກເຈົ້າສະເຫມີ,
ຕະຫລອດທຸກຍຸກສະໄຫມຂອງພວກເຈົ້າ, ວ່າພວກເຈົ້າຕ້ອງຖືປະຕິບັດມື້ນີ້.
[15]ພວກເຈົ້າຈະຕ້ອງກິນເຂົ້າຈີ່ບໍ່ມີເຊື້ອແປ້ງໃນລະຫວ່າງເຈັດມື້.
ໃນມື້ທຳອິດພວກເຈົ້າຈະຕ້ອງເອົາເຊື້ອແປ້ງອອກຈາກເຮືອນຂອງພວກເຈົ້າໃຫ້ຫມົດ. ຜູ້ໃດກໍຕາມທີ່ກິນເຂົ້າຈີ່ທີ່ມີເຊື້ອແປ້ງ
ຕັ້ງແຕ່ມື້ທຳອິດຈົນເຖິງມື້ທີເຈັດ, ຄົນນັ້ນຈະຕ້ອງຖືກຕັດອອກຈາກເປັນຊາວອິສະຣາເອນ.
[16]ໃນມື້ທຳອິດຈະຕ້ອງມີການຊຸມນຸມທີ່ກຽມໄວ້ສຳລັບເຮົາ, ແລະໃນມື້ທີເຈັດຈະຕ້ອງມີການຊຸມນຸມເຫມືອນກັນນີ້. ຈະຕ້ອງບໍ່ເຮັດວຽກມື້ເຫລົ່ານີ້,
ຍົກເວັ້ນການປຸງແຕ່ງອາຫານໃຫ້ທຸກຄົນກິນ. ນີ້ເປັນວຽກດຽວເທົ່ານັ້ນທີ່ພວກເຈົ້າເຮັດໄດ້.
[17]ພວກເຈົ້າຕ້ອງຖືປະຕິບັດເທສະການເຂົ້າຈີ່ບໍ່ມີເຊື້ອແປ້ງນີ້ ເພາະໃນມື້ນີ້ເອງເຮົາຈະໄດ້ນຳປະຊາຊົນຂອງເຮົາ,
ແບ່ງທະຫານອອກໂດຍແຕ່ລະກຸ່ມ, ເພື່ອອອກຈາກແຜ່ນດິນອີຢິບ. ດັ່ງນັ້ນພວກເຈົ້າຕ້ອງຖືປະຕິບັດວັນດັ່ງກ່າວນີ້
ຕະຫລອດຊົ່ວຍຸກສະໄຫມຂອງພວກເຈົ້າ. ນີ້ເປັນບັນຍັດຕະຫລອດໄປສຳລັບພວກເຈົ້າ.[18]ພວກເຈົ້າຈະຕ້ອງກິນເຂົ້າຈີ່ບໍ່ມີເຊື້ອແປ້ງ
ຕັ້ງແຕ່ໃນຕອນຕາເວັນລັບແສງຂອງມື້ທີສິບສີ່ເດືອນທຳອິດຂອງປີ, ຈົນເຖິງຕາເວັນລັບແສງໃນວັນທີຊາວເອັດຂອງເດືອນ.
[19]ລະຫວ່າງເຈັດມື້ເຫລົ່ານີ້, ຈະຕ້ອງບໍ່ມີເຊື້ອແປ້ງໃຫ້ເຫັນໃນເຮືອນຂອງພວກເຈົ້າ.
ຜູ້ໃດກໍຕາມທີ່ກິນເຂົ້າຈີ່ໃສ່ເຊື້ອແປ້ງຈະຕ້ອງຖືກຕັດອອກຈາກຊຸມຊົນຊາວອິສະຣາເອນ, ແມ່ນແຕ່ຄົນນັ້ນຈະເປັນຄົນຕ່າງຊາດ
ຫລືຄົນທີ່ເກີດໃນແຜ່ນດິນຂອງເຈົ້າກໍຕາມ.[20]ພວກເຈົ້າຕ້ອງບໍ່ກິນສິ່ງໃດໆທີ່ເຮັດດ້ວຍເຊື້ອແປ້ງ. ບໍ່ວ່າພວກເຈົ້າຈະຢູ່ບ່ອນໃດກໍຕາມ,
ພວກເຈົ້າຈະຕ້ອງກິນເຂົ້າທີ່ບໍ່ມີເຊື້ອແປ້ງ.'"
[21]ແລ້ວໂມເຊໄດ້ເອີ້ນພວກຜູ້ອາວຸໂສທຸກຄົນຂອງອິສະຣາເອນມາພົບ ແລະ ກ່າວກັບພວກເຂົາວ່າ. "ຈົ່ງໄປ ແລະ
ເລືອກລູກແກະທີ່ຈະພຽງພໍສຳລັບລ້ຽງຄອບຄົວຂອງພວກເຈົ້າ ແລະ ຂ້າເປັນລູກແກະປັດສະຄາ.[22]ແລ້ວໄປເອົາກົ່ງຫຸສົບມາ
ແລ້ວຈຸ່ມມັນລົງໃນເລືອດທີ່ຢູ່ໃນອ່າງ. ໃຊ້ເລືອດໃນອ່າງປ້າຍດ້ານເທິງຂອງຂອບປະຕູ ແລະ ເສົາປະຕູທັງສອງຂ້າງ.
ບໍ່ໃຫ້ຜູ້ໃດໃນພວກທ່ານອອກໄປນອກປະຕູເຮືອນຈົນກວ່າຈະຮອດຕອນເຊົ້າ.
[23]ເພາະພຣະຢາເວຈະຜ່ານໄປເພື່ອຈະປະຫານຊາວອີຢິບ. ເມື່ອພຣະອົງທອດພຣະເນດເຫັນເລືອດທີ່ດ້ານເທິງຂອງຂອບປະຕູ ແລະ
ທັງສອງຂ້າງຂອງເສົາປະຕູ, ພຣະອົງຈະຜ່ານເວັ້ນປະຕູພວກເຈົ້າ
ແລະຈະບໍ່ໃຫ້ຜູ້ສັງຫານເຂົ້າໄປໃນເຮືອນຂອງພວກທ່ານເພື່ອຈະປະຫານພວກເຈົ້າ.
[24]ເຈົ້າທັງຫລາຍຈົ່ງຖືເຫດການນີ້. ໃຫ້ເປັນບັນຍັດຖາວອນຂອງພວກເຈົ້າ ແລະຂອງລູກຫລານຂອງພວກເຈົ້າ.
[25]ເມື່ອພວກເຈົ້າເຂົ້າໄປເຖິງແຜ່ນດິນຊຶ່ງພຣະຢາເວຈະປຣະທານແກ່ພວກເຈົ້າ, ຕາມທີ່ພຣະອົງໄດ້ສັນຍາໄວ້,
ພວກເຈົ້າຕ້ອງຖືພິທີປະຕິບັດການນະມັດສະການີ້.
[26]ເມື່ອລູກຂອງພວກເຈົ້າຖາມວ່າ, 'ພິທີປະຕິບັດການນະມັດສະການນີ້ຫມາຍເຖິງຫຍັງ?'[27]ແລ້ວໃຫ້ພວກເຈົ້າຈົ່ງຕອບວ່າ,
'ເປັນການຖວາຍເຄື່ອງບູຊາປັດສະຄາແດ່ພຣະຢາເວ, ເພາະພຣະຢາເວໄດ້ຜ່ານເວັ້ນເຮືອນຂອງຊາວອິສະຣາເອນໃນອີຢິບ
ເມື່ອພຣະອົງໄດ້ປະຫານຊາວເອຢິບນັ້ນ. ພຣະອົງໄດ້ໄວ້ຊີວິດຄອບຄົວຂອງພວກເຮົາ.'" ແລ້ວປະຊາຊົນກໍຂາບລົງນະມັດສະການພຣະຢາເວ.
[28]ຊາວອິສະຣາເອນກໍໄປ ແລະ ເຮັດຕາມຄຳສັ່ງຢ່າງເຄັ່ງຄັດ ດັ່ງທີ່ພຣະຢາເວສັ່ງໂມເຊ ແລະ ອາໂຣນ.
[29]ໃນເວລາທ່ຽງຄືນ ພຣະຢາເວໄດ້ປະຫານລູກກົກທຸກຄົນໃນແຜ່ນດິນອີຢິບ, ຕັ້ງແຕ່ລູກກົກຂອງຟາຣາໂອ, ຜູ້ໄດ້ນັ່ງເທິງບັນລັງ,
ຈົນໄປເຖິງລູກກົກຂອງຄົນທີ່ຢູ່ໃນຄຸກ ແລະລູກກົກຂອງຝູງສັດລ້ຽງທຸກໂຕ.[30]ຟາຣາໂອ ພ້ອມດ້ວຍຂ້າຣາຊະການ, ແລະຊາວອີຢິບທັງຫມົດ
ໄດ້ຕື່ນໃນເວລາກາງຄືນ. ມີການຮ້ອງໄຫ້ຄ່ຳຄວນສຽງດັງທົ່ວໄປໃນອີຢິບ, ເພາະວ່າບໍ່ມີເຮືອນໃດເລີຍທີ່ບໍ່ມີຄົນຕາຍ.

 generated on Tue Jun 17 19:01:42 2025

31ຟາຣາໂອເອີ້ນໂມເຊ ແລະ ອາໂຣນເຂົ້າເຝົ້າໃນເວລາກາງຄືນ ແລະກ່າວວ່າ, "ຈົ່ງລຸກຂຶ້ນ, ອອກໄປຈາກປະຊາຊົນຂອງຂ້ອຍ, ຕະຫລອດທັງເຈົ້າ
ແລະ ຊາວອິສະຣາເອນ. ຈົ່ງໄປ, ນະມັດສະການພຣະຢາເວ, ຕາມທີ່ເຈົ້າເວົ້າວ່າເຈົ້າຕ້ອງເຮັດຢ່າງນັ້ນ. 32ຈົ່ງເອົາຝູງແບ້ແກະ ແລະ
ຝູງງົວຂອງພວກເຈົ້າໄປ, ແລະຈົ່ງໄປ,
ແລະອວຍພອນໃຫ້ແກ່ເຮົາດ້ວຍ." 33ຝ່າຍຊາວອີຢິບກໍໄດ້ເລັ່ງໃຫ້ພວກເຂົາອອກໄປຈາກແຜ່ນດິນນັ້ນໂດຍໄວ, ເພາະພວກເຂົາເວົ້າວ່າ,
"ພວກເຮົາຕາຍກັນຫມົດແລ້ວ."
34ດັ່ງນັ້ນປະຊາຊົນໄດ້ນຳເອົາກ້ອນແປ້ງບໍ່ມີເຊື້ອແປ້ງໄປນຳ. ອ່າງນວດແປ້ງຂອງພວກເຂົາກໍໄດ້ຫໍ່ຜ້າໄວ້ ແລະ ໃສ່ເທິງບ່າຂອງພວກເຂົາແບກໄປ.
35ບັດນີ້ ປະຊາຊົນອິສະຣາເອນໄດ້ເຮັດຕາມທີ່ໂມເຊໄດ້ສັ່ງພວກເຂົາ. ພວກເຂົາໄດ້ຂໍເຄື່ອງເງິນ, ເຄື່ອງຄຳ, ແລະເຄື່ອງນຸ່ງຫົ່ມຈາກຊາວອີຢິບ.
36ພຣະຢາເວໄດ້ເຮັດໃຫ້ຊາວອີຢິບຮ້ອນຮົນເພື່ອໃຫ້ເປັນທີ່ພໍໃຈຊາວອິສະຣາເອນ. ດັ່ງນັ້ນຊາວອີຢິບຈຶ່ງໄດ້ໃຫ້ສິ່ງຂອງຕາມທີ່ພວກເຂົາໄດ້ຂໍ.
ດ້ວຍວິທີນີ້, ຊາວອິສະຣາເອນຈຶ່ງໄດ້ຍຶດເອົາສິ່ງຂອງຈາກຊາວອີຢິບໄປ.
37ຊາວອິສະຣາເອນໄດ້ອອກເດີນທາງຈາກເມືອງຣາມາເສດໄປເຖິງເມືອງສຸກໂກດ. ມີຜູ້ຊາຍເດີນທາງໂດຍການຍ່າງປະມານ 600,000 ຄົນ
ໂດຍບໍ່ໄດ້ນັບຜູ້ຍິງ ແລະ ເດັກນ້ອຍ. 38ມີຄົນຊາດອື່ນທີ່ບໍ່ແມ່ນຄົນອິສະຣາເອນໄປກັບພວກເຂົາດ້ວຍ, ພ້ອມທັງຝູງແບ້ແກະ
ແລະຝູງງົວເປັນຈຳນວນຫລວງຫລາຍ. 39ພວກເຂົາປີ້ງເຂົ້າຈີ່ບໍ່ມີເຊື້ອແປ້ງ ທີ່ພວກເຂົາເອົາມາຈາກອີຢິບ.
ທີ່ບໍ່ໃສ່ເຊື້ອແປ້ງເພາະພວກເຂົາໄດ້ຖືກເລັ່ງໃຫ້ອອກຈາກອີຢິບໂດຍໄວ ແລະ ບໍ່ອາດຊັກຊ້າເພື່ອກຽມອາຫານໄດ້.
40ຊາວອິສະຣາເອນໄດ້ຢູ່ໃນອີຢິບເປັນເວລາ 430 ປີ.
41ເມື່ອຄົບ 430 ປີ, ວັນນັ້ນເອງ, ພົນໂຍທາຂອງພຣະຢາເວໄດ້ເດີນທາງອອກຈາກແຜ່ນດິນອີຢິບ. 42ຄືນວັນນີ້ເປັນຄືນທີ່ຕ້ອງເຝົ້າລະວັງ,
ເພາະພຣະຢາເວຈະນຳພວກເຂົາອອກຈາກແຜ່ນດິນອີຢິບ. ນີ້ເປັນຄືນແຫ່ງພຣະຢາເວທີ່ຊາວອິສະຣາເອນ
ຕະຫລອດຈົນເຖິງຍຸກລູກຫລາຍຕ້ອງຖືປະຕິບັດ.
43ພຣະຢາເວໄດ້ກ່າວກັບໂມເຊ ແລະອາໂຣນວ່າ, "ລະບຽບພິທີປັດສະຄາເປັນດັ່ງນີ້: ຄືຢ່າໃຫ້ຄົນຕ່າງຊາດຮ່ວມກິນ. 44ເຖິງຢ່າງໃດກໍຕາມ,
ທາດທຸກຄົນຂອງຊາວອິສະຣາເອນ, ທີ່ໄດ້ເອົາເງິນຊື້ມາ, ອາດກິນໄດ້ຫລັງຈາກເຈົ້າໃຫ້ເຂົາເຂົ້າພິທີຕັດແລ້ວ.
45ຄົນຕ່າງດ້າວ ແລະລູກຈ້າງຕ້ອງບໍ່ໃຫ້ກິນອາຫານໃດໆ 46ອາຫານນັ້ນໃຫ້ກິນແຕ່ໃນເຮືອນຂອງຕົນເທົ່ານັ້ນ. ເຈົ້າຕ້ອງບໍ່ເອົາຊີ້ນໄປນອກເຮືອນ,
ແລະບໍ່ຫັກກະດູກໃດໆຂອງມັນແລີຍ.
47ໃຫ້ຊຸມນຸມຊາວອິສະຣາເອນທັງຫມົດປະບັດຕາມພິທີນີ້. 48ຖ້າມີຄົນຕ່າງດ້າວມາອາໄສຢູ່ກັບເຈົ້າ
ແລະຕ້ອງການຈະປະຕິບັດຕາມພິທີປັດສະຄາຖວາຍແດ່ພຣະຢາເວ, ກໍໃຫ້ຊາຍພວກນັ້ນທຸກຄົນເຂົ້າພິທີຕັດກ່ອນ. ແລ້ວຈຶ່ງໃຫ້ເຂົາມາ
ແລະປະຕິບັດຕາມພິທີນັ້ນໄດ້. ລາວຈະກາຍເປັນເຫມືອນຄົນທີ່ເກີດໃນແຜ່ນດິນນັ້ນ. ເຖິງຢ່າງໃດກໍຕາມ, ຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ
ຈະກິນອາຫານໃດໆບໍ່ໄດ້.
49ບົດບັດຍັດນີ້ຈະຕ້ອງປະຕິບັດແບບດຽວກັນທັງຄົນພື້ນເມືອງ
ແລະຄົນຕ່າງຊາດຊຶ່ງອາໄສຢູ່ທ່າມກາງພວກເຈົ້າ." 50ດັ່ງນັ້ນຊາວອິສະຣາເອນທຸກຄົນກໍໄດ້ປະຕິບັດຕາມທີ່ພຣະຢາເວໄດ້ມີຄຳສັ່ງແກ່ໂມເຊແລະອາໂຣນ.
51ໃນມື້ນັ້ນເອງທີ່ພຣະຢາເວໄດ້ນຳຊາວອິສະຣາເອນອອກຈາກແຜ່ນດິນອີຢິບ ໂດຍການແຍກເປັນຂະບວນພົນໂຍທາ.

 generated on Tue Jun 17 19:01:42 2025

13 [1]ພຣະຢາເວໄດ້ກ່າວກັບໂມເຊ ແລະຊົງກ່າວວ່າ,[2]"ຈົ່ງແຍກລູກກົກທັງຫມົດໄວ້ໃຫ້ເຮົາ, ສິ່ງທີ່ອອກຈາກຄັນຄັ້ງທໍາອິດເພດຜູ້ທຸກຊະນິດ,
ບໍ່ວ່າຈະເປັນຄົນ ຫລືສັດ. ລູກຫົວປີນັ້ນເປັນຂອງເຮົາ."

[3]ໂມເຊໄດ້ກ່າວແກ່ປະຊາຊົນວ່າ, "ຈົ່ງລະນຶກເຖິງມື້ນີ້ທີ່ພວກເຈົ້າໄດ້ອອກມາຈາກອີຢິບ, ອອກຈາກເຮືອນແຫ່ງການເປັນທາດ,
ເພາະໂດຍພຣະຫັດຂອງພຣະຢາເວອັນເຂັ້ມແຂງ ໄດ້ນໍາພວກເຈົ້າອອກຈາກທີ່ນັ້ນ. ຢ່າກິນເຂົ້າຈີ່ທີ່ມີເຊື້ອແປ້ງ.
[4]ພວກເຈົ້າໄດ້ອອກຈາກອີຢິບໃນມື້ນີ້, ໃນເດືອນອາບິບ.[5]ເມື່ອພຣະຢາເວນໍາພວກເຈົ້າມາເຖິງແຜ່ນດິນຂອງຊາວການາອານ, ຊາວຮິດຕີ,
ຊາວອະໂມຣິດ, ຊາວຮີວີ, ແລະຊາວເຢບຸດ, ແຜ່ນດິນທີ່ພຣະອົງສັນຍາໄວ້ກັບບັນພະບຸຣຸດຂອງເຈົ້າ, ວ່າຈະຍົກໃຫ້ເຈົ້າເປັນແຜ່ນດິນທີ່ມີນ້ໍານົມ
ແລະນ້ໍາເຜິ້ງ—ແລ້ວພວກເຈົ້າຈົ່ງຖືພິທີປະຕິບັດການນະມັດສະການນີ້ໃນເດືອນນີ້.
[6]ເປັນເວລາເຈັດມື້ທ່ານຕ້ອງກິນເຂົ້າຈີ່ບໍ່ມີເຊື້ອແປ້ງ; ໃນມື້ທີເຈັດຈົ່ງມີເທສະການລ້ຽງ ເພື່ອຖວາຍກຽຕແດ່ພຣະຢາເວ.
[7]ຈົ່ງກິນເຂົ້າຈີ່ບໍ່ມີເຊື້ອແປ້ງຕະຫລອດທັງເຈັດມື້; ຢ່າໃຫ້ເຫັນເຂົ້າຈີ່ທີ່ມີເຊື້ອໃນຫມູ່ພວກທ່ານ.
ຢ່າໃຫ້ເຫັນເຊື້ອໃດໆຕາມອານາເຂດຂອງພວກທ່ານ.
[8]ໃນມື້ນັ້ນ ຈົ່ງບອກລູກທັງຫລາຍຂອງເຈົ້າ, 'ການເຮັດສິ່ງນີ້ກໍ ເພາະພຣະຢາເວໄດ້ກະທໍາເພື່ອເຮົາ
ໃນຂະນະທີ່ເຮົາອອກມາຈາກອີຢິບ.'[9]ນີ້ຈະເປັນດັ່ງສິ່ງເຕືອນໃຈທີ່ມືຂອງເຈົ້າ, ແລະທີ່ຫນ້າຜາກຂອງເຈົ້າ.
ນີ້ກໍເພື່ອພຣະບັນຍັດຂອງພຣະຢາເວຈະຢູ່ທີ່ປາກຂອງເຈົ້າ, ເພາະດ້ວຍພຣະຫັດອັນເຂັ້ມແຂງຂອງພຣະຢາເວທີ່ໄດ້ຊົງນໍາເຈົ້າອອກຈາກອີຢິບ.
[10]ສະນັ້ນເຈົ້າຈົ່ງຮັກສາກົດເກນນີ້ຕາມກໍາຫນົດທຸກໆປີໄປ.
[11]ເມື່ອພຣະຢາເວຊົງນໍາເຈົ້າໄປຍັງແຜ່ນດິນຂອງຄົນການາອານ, ດັ່ງທີ່ພຣະອົງໄດ້ສັນຍາໄວ້ກັບເຈົ້າ ແລະບັນພະບຸຣຸດຂອງເຈົ້າທີ່ຈະຊົງກະທໍາ,
ແລະເມື່ອພຣະອົງຈະປຣະທານແຜ່ນດິນນັ້ນແກ່ພວກເຈົ້າ.[12]ເຈົ້າຈົ່ງແຍກລູກກົກທຸກຄົນ ແລະລູກສັດຫົວປີທຸກໂຕຂອງເຈົ້າອອກໄວ້.
ເພດຜູ້ທຸກໂຕຈະເປັນຂອງພຣະຢາເວ.[13]ລູກລໍຫົວປີທຸກໂຕເຈົ້າສາມາດຊື້ກັບຄືນຄືດຽວກັບລູກແກະກໍໄດ້. ຖ້າເຈົ້າບໍ່ຕ້ອງການຊື້ຄືນ,
ແລ້ວເຈົ້າຈົ່ງຫັກຄໍມັນ. ແຕ່ລູກກົກຂອງເຈົ້າໃນທ່າມກາງລູກຊາຍທັງຫລາຍຂອງເຈົ້າ—ເຈົ້າຕ້ອງຊື້ພວກເຂົາຄືນມາ.
[14]ເມື່ອຕໍ່ໄປພາຍຫນ້າ ເມື່ອລູກຊາຍຂອງເຈົ້າຖາມວ່າ, 'ການເຮັດຢ່າງນີ້ຫມາຍຄວາມວ່າຫຍັງ?' ກໍໃຫ້ເຈົ້າຕອບເຂົາວ່າ,
'ເປັນເພາະພຣະຫັດອັນເຂັ້ມແຂງທີ່ພຣະຢາເວໄດ້ຊົງນໍາພວກເຮົາອອກຈາກອີຢິບຈາກເຮືອນທາດ.
[15]ເມື່ອຟາຣາໂອດື້ດ້ານບໍ່ຍອມປ່ອຍພວກເຮົາໄປ. ພຣະຢາເວຈຶ່ງປະຫານລູກກົກທັງຫມົດໃນແຜ່ນດິນອີຢິບ ແລະ ລູກຫົວປີຂອງສັດທັງຫມົດ.
ທັງລູກກົກຂອງຄົນ ແລະ ລູກຫົວປີຂອງສັດ. ນີ້ຄືເຫດທີ່ຂ້ານ້ອຍຖວາຍບູຊາໂຕຜູ້ທຸກໂຕທີ່ອອກມາຈາກຄັນທໍາອິດແດ່ພຣະຢາເວ,
ແລະນີ້ຄືເຫດວ່າເປັນຫຍັງເຮົາຈຶ່ງຊື້ລູກຊາຍກົກທັງຫມົດຂອງເຮົາກັບຄືນມາ.'[16]ນີ້ຈະກາຍມາເປັນສິ່ງເຕືອນໃຈເທິງມື,
ແລະເຕືອນຄວາມຈໍາເທິງຫນ້າຜາກຂອງເຈົ້າ. ເພາະດ້ວຍພຣະຫັດອັນເຂັ້ມແຂງຂອງພຣະຢາເວໄດ້ນໍາພວກເຮົາອອກມາຈາກອີຢິບ."
[17]ເມື່ອຟາຣາໂອໄດ້ປ່ອຍປະຊາຊົນໄປແລ້ວ, ພຣະເຈົ້າບໍ່ໄດ້ຊົງນໍາພວກເຂົາໄປທາງແຜ່ນດິນຂອງຊາວຟີລິດສະຕິນ,
ເຖິງແມ່ນວ່າຈະເປັນທາງໃກ້ກໍຕາມ. ເພາະພຣະເຈົ້າກ່າວວ່າ, "ບາງເທື່ອເມື່ອປະຊາຊົນຈະປ່ຽນໃຈ ເມື່ອພວກເຂົາຕ້ອງຜະເຊີນຫນ້າກັບສົງຄາມ
ແລະຈະກັບໄປຍັງອີຢິບອີກ.[18]ດັ່ງນັ້ນ ພຣະເຈົ້າຈຶ່ງນໍາປະຊາຊົນອ້ອມໄປຍັງຖິ່ນແຫ້ງແລ້ງກັນດານຈົນເຖິງທະເລຕົ້ນກົກ.
ຊາວອິສະຣາເອນກໍອອກຈາກແຜ່ນດິນອີຢິບພ້ອມອາວຸດທໍາສົງຄາມ.
[19]ໂມເຊໄດ້ນໍາເອົາກະດູກຂອງໂຢເຊັບໄປກັບລາວດ້ວຍ, ເພາະໂຢເຊັບໄດ້ໃຫ້ຊາວອິສະຣາເອນປະຕິຍານຢ່າງຈິງຈັງ ແລະກ່າວວ່າ,
"ພຣະເຈົ້າຈະຊ່ວຍພວກທ່ານຢ່າງແນ່ນອນນັ້ນ,
ແລະໃຫ້ພວກທ່ານຈົ່ງເອົາກະດູກຂອງຂ້ອຍໄປກັບພວກເຈົ້າດ້ວຍ."[20]ພວກອິສະຣາເອນອົບພະຍົບອອກຈາກເມືອງສຸກໂກດ
ແລະຕັ້ງຄ້າຍທີ່ເອທາມຊຶ່ງຢູ່ຂອບຂອງຖິ່ນແຫ້ງແລ້ງກັນດານ.[21]ພຣະຢາເວນໍາທາງພວກເຂົາໃນເວລາກາງວັນດ້ວຍເສົາເມກ.
ໃນເວລາກາງຄືນດ້ວຍເສົາໄຟ ເພື່ອໃຫ້ພວກເຂົາມີຄວາມສະຫວ່າງ. ດ້ວຍວິທີນີ້ ພວກເຂົາຈະເດີນທາງໄດ້ທັງກາງເວັນ ແລະ ກາງຄືນ.
[22]ພຣະຢາເວບໍ່ໄດ້ເອົາເສົາເມກໃນເວລາກາງເວັນ ຫລືເສົາໄຟໃນເວລາກາງຄືນ ອອກຫນີຈາກເບື້ອງຫນ້າປະຊາຊົນເລີຍ.


generated on Tue Jun 17 19:01:42 2025

14 1ພຣະຢາເວໄດ້ກ່າວກັບໂມເຊ ແລະກ່າວວ່າ, 2"ຈົ່ງສັ່ງຊາວອິສະຣາເອນວ່າ ພວກເຂົາຄວນຫັນກັບ ແລະຕັ້ງຄ້າຍຫນ້າປີຮາຮີໂຣດ,
ໃນລະຫວ່າງມິກໂດນ ແລະທະເລ, ຫນ້າບາອານເຊໂຟນ. ພວກເຈົ້າຈະຕ້ອງຕັ້ງຄ້າຍບໍລິເວນແຄມທະເລ ກົງກັນຂ້ວາມປີຮາຮີໂຣດ.
3ຟາຣາໂອຈະກ່າວເຖິງຊາວອິສະຣາເອນວ່າ, 'ພວກເຂົາກຳລັງພະເນຈອນໄປໃນແຜ່ນດິນ. ຖິ່ນແຫ້ງແລ້ງກັນດານໄດ້ປິດກັ້ນພວກເຂົາໄວ້.'

4ເຮົາໄດ້ເຮັດໃຫ້ໃຈຂອງຟາຣາໂອແຂງກະດ້າງໄປ, ແລະລາວຈະໄລ່ຕິດຕາມພວກເຈົ້າ. ເຮົາຈະໄດ້ຮັບກຽຕຍ້ອນຟາຣາໂອ
ແລະກອງທັບທັງຫມົດຂອງລາວ. ຊາວເອຢິບຈະຮູ້ວ່າ ເຮົາຄືພຣະຢາເວ." ດັ່ງນັ້ນຊາວອິສະຣາເອນກໍໄດ້ຕັ້ງຄ້າຍດັ່ງທີ່ພວກເຂົາໄດ້ຮັບຄຳສັ່ງນັ້ນ.
5ເມື່ອກະສັດອີຢິບໄດ້ຮູ້ວ່າຊາວອິສະຣາເອນໄດ້ຫນີໄປແລ້ວ, ທ່າທີຂອງຟາຣາໂອ ແລະ
ບັນດາຂ້າຣາຊະການຂອງພະອົງກໍປ່ຽນໃຈມາຕໍ່ສູ້ປະຊາຊົນ. ພວກເຂົາກ່າວວ່າ,
"ພວກເຮົາໄດ້ເຮັດຫຍັງລົງໄປໃນການປ່ອຍພວກອິສະຣາເອນໄປລ້າໆ ແທນທີ່ຈະເຮັດວຽກຮັບໃຊ້ພວກເຮົາ?"
6ແລ້ວຟາຣາໂອກໍກຽມພ້ອມເຫລົ້າທະຫານມ້າ ແລະນຳກອງທັບໄປກັບພະອົງດ້ວຍ.7ພະອົງນຳລົດມ້າຫົກຮ້ອຍຄັນ ແລະ
ລົດມ້າອື່ນອີກທັງຫມົດຂອງຊາວອີຢິບ, ພ້ອມທັງບັນດານາຍທະຫານປະຈຳຢູ່ທຸກຄັນ.8ພຣະຢາເວໄດ້ໃຫ້ໃຈຂອງຟາຣາໂອແຂງກະດ້າງ,
ກະສັດຂອງເອຢິບ, ແລະກະສັດໄດ້ຕິດຕາມຊາວອິສະຣາເອນໄປ. ບັດນີ້ ຊາວອິສະຣາເອນຫນີອອກໄປດ້ວຍຊັຍຊະນະ.
9ແຕ່ຊາວເອຢິບໄດ້ຕິດຕາມພວກເຂົາໄປ, ພ້ອມທັງມ້າທັງຫມົດຂອງພະອົງ ແລະ ລົດມ້າທັງຫລາຍ, ພົນມ້າຂອງພະອົງ,
ແລະທະຫານຂອງພະອົງ. ພວກເຂົາໄດ້ຕິດຕາມມາທັນຊາວອິສະຣາເອນ ທີ່ຕັ້ງຄ້າຍຢູ່ບໍລິເວນ ແຄມທະເລກົງກັນຂ້າມກັບປີຮາຮີໂຣດ,
ດ້ານຫນ້າບາອານເຊໂຟນ.
10ເມື່ອຟາຣາໂອໄດ້ເຂົ້າມາໃກ້, ຊາວອິສະຣາເອນກໍໄດ້ເງີຍຫນ້າຂຶ້ນເບິ່ງ ແລະ ປະຫລາດໃຈ. ຊາວເອຢິບກຳລັງຍົກກອງທັບຕິດຕາມມາ,
ແລະພວກເຂົາກໍຢ້ານຫລາຍ. ຊາວອິສະຣາເອນຈຶ່ງໄດ້ຮ້ອງຫາພຣະຢາເວ.11ພວກເຂົາໄດ້ກ່າວແກ່ໂມເຊວ່າ, "ຂຸມຝັງສົບໃນອີຢິບບໍ່ມີບໍ,
ທ່ານຈຶ່ງໄດ້ພາພວກເຮົາອອກມາຕາຍໃນຖິ່ນແຫ້ງແລ້ງກັນດານນີ້? ເປັນຫຍັງທ່ານຈຶ່ງເຮັດກັບພວກເຮົາຢ່າງນີ້, ຄືພາພວກເຮົາອອກມາຈາກອີຢິບ?
12ເຮົາບອກທ່ານໃນອີຢິບແລ້ວບໍ່ແມ່ນບໍ? ເຮົາບອກທ່ານວ່າ, 'ຈົ່ງປ່ອຍພວກເຮົາຕາມລຳພັງ, ໃຫ້ພວກເຮົາຮັບໃຊ້ຊາວອີຢິບເຖີດ.'
ເຮັດວຽກໃຫ້ພວກເຂົາກໍຍັງດີກວ່າ ພວກເຮົາມາຕາຍໃນຖິ່ນແຫ້ງແລ້ງກັນດານນີ້."
13ໂມເຊໄດ້ກ່າວກັບປະຊາຊົນວ່າ, "ຢ່າຢ້ານເລີຍ. ຈົ່ງສະຫງົບໄວ້ ແລະ ເບິ່ງການຊ່ວຍເຫລືອທີ່ພຣະຢາເວຈະເຮັດເພື່ອພວກທ່ານໃນມື້ນີ້.
ເພາະພວກທ່ານຈະບໍ່ໄດ້ເຫັນຄົນອີຢິບທີ່ເຫັນໃນມື້ນີ້ອີກ.14ພຣະຢາເວຈະສູ້ຮົບແທນພວກທ່ານ, ແລະພວກທ່ານຈຶ່ງສະຫງົບຢູ່ເຖີດ."
15ແລ້ວພຣະຢາເວໄດ້ກ່າວກັບໂມເຊວ່າ, "ເປັນຫຍັງ, ໂມເຊ, ຈຶ່ງມາຮ້ອງທຸກຕໍ່ເຮົາອີກ? ຈົ່ງສັ່ງອິສະຣາເອນໃຫ້ເດີນທາງຕໍ່ໄປ.
16ຈົ່ງຍົກໄມ້ຄ້ອນເທົ້າຂອງເຈົ້າຂຶ້ນ, ແລ້ວຍື່ນມືອອກໄປເຫນືອທະເລ ແລະ ແຍກມັນອອກໃຫ້ເປັນສອງສ່ວນ,
ເພື່ອວ່າຊາວອິສະຣາເອນຈະຍ່າງຜ່ານທະເລເທິງດິນແຫ້ງໄດ້.17ຈົ່ງຮູ້ວ່າເຮົາກໍຈະເຮັດໃຫ້ໃຈຂອງຊາວອີຢິບແຂງກະດ້າງ
ແລ້ວພວກເຂົາຈະຕາມພວກເຈົ້າໄປ. ເຮົາຈະໄດ້ຮັບກຽດ ເພາະຟາຣາໂອແລະທະຫານທັງຫມົດ, ລົດຮົບ, ແລະພົນມ້າທັງຫລາຍຂອງເຂົາ.
18ແລ້ວຊາວອີຢິບຈະຮູ້ວ່າເຮົາຄືພຣະຢາເວ ເມື່ອເຮົາໄດ້ຮັບກຽດ ເພາະຟາຣາໂອ, ລົດມ້າທັງຫລາຍ, ແລະລົດຮົບຂອງເຂົາ."
19ເທວະດາຂອງພຣະເຈົ້າ, ຜູ້ຊຶ່ງນຳຫນ້າຊາວອິສະຣາເອນ, ກໍໄດ້ຍ້າຍກັບ ແລະໄປຢູ່ຂ້າງຫລັງຂອງພວກເຂົາ. ເສົາເມກຍ້າຍຈາກຂ້າງຫນ້າ
ແລະ ກໍກັບມາຕັ້ງຢູ່ຂ້າງຫລັງພວກເຂົາ.20ເສົາເມກມາຢູ່ລະຫວ່າງຄ້າຍຂອງອີຢິບ ແລະຄ້າຍຂອງອິສະຣາເອນ. ເປັນເມກມືດແກ່ຊາວອີຢິບ,
ແຕ່ເປັນແສງສະຫວ່າງແກ່ຊາວອິສະຣາເອນ, ໂດຍຂ້າງຫນຶ່ງກໍບໍ່ເຂົ້າມາໃກ້ກັນກັບອີກຂ້າງຫນຶ່ງຕະຫລອດຄືນ.
21ໂມເຊໄດ້ຍື່ນມືອອກເຫນືອທະເລ, ພຣະຢາເວກໍໄດ້ບັນດານໃຫ້ລົມຕາເວັນອອກພັດໃຫ້ທະເລໄຫລກັບ ຕະຫລອດທັງກາງຄືນ
ແລະເຮັດໃຫ້ນ້ຳທະເລກາຍເປັນດິນແຫ້ງ. ໂດຍວິທີນີ້ນ້ຳທະເລໄດ້ແຍກອອກຈາກກັນ.
22ຊາວອິສະຣາເອນກໍໄດ້ພາກັນຍ່າງຜ່ານກາງທະເລເທິງດິນແຫ້ງ. ນ້ຳນັ້ນຕັ້ງເປັນເຫມືອນກຳແພງຂຶ້ນມາສຳລັບພວກເຂົາທັງທາງຂວາ ແລະ
ທາງຊ້າຍ.
23ຊາວອີຢິບກໍໄດ້ໄລ່ຕາມພວກເຂົາໄປ. ພວກເຂົາຕິດຕາມເຂົ້າໄປໃນກາງທະເລ—ມ້າທັງຫມົດຂອງຟາອາໂອ, ລົດມ້າທັງຫລາຍ,
ແລະພົນທະຫານດ້ວຍ.24ແຕ່ເມື່ອຕອນເຊົ້າມືດ, ພຣະຢາເວໄດ້ເບິ່ງທະຫານຊາວອີຢິບຈາກເສົາໄຟ ແລະເສົາເມກ.
ພຣະອົງໄດ້ເຮັດໃຫ້ຊາວອີຢິບແຕກຕື່ນທ່າມກາງພວກເຂົາ.25ລໍ້ລົດມ້າຄາ, ແລະ ພົນມ້າຂັບໄປດ້ວຍຄວາມລຳບາກ. ດັ່ງນັ້ນຊາວອີຢິບຈຶ່ງກ່າວວ່າ,
ໃຫ້ເຮົາຫນີຈາກອິສະຣາເອນເຖີດ, ເພາະພຣະຢາເວຕໍ່ສູ້ອີຢິບແທນພວກເຂົາ."
26ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງຍື່ນມືອອກເຫນືອທະເລ ເພື່ອວ່ານ້ຳທະເລຈະໄຫລກັບຄືນມາຖ້ວມຊາວອີຢິບ, ລົດມ້າທັງຫມົດຂອງພວກເຂົາ,
ແລະພົນທະຫານຂອງພວກເຂົາ."27ດັ່ງນັ້ນໂມເຊຈຶ່ງໄດ້ຍື່ນມືອອກເຫນືອທະເລ, ແລະມັນກໍໄດ້ໄຫລກັບຄືນຄືເກົ່າໃນເວລາຕອນເຊົ້າມືດ.
ຊາວອີຢິບໄດ້ພາກັນຫນີກະແສນ້ຳ, ແລພຣະຢາເວໄດ້ກວາດຄົນອີຢິບລົງກາງທະເລ.28ນ້ຳທະເລກໍໄດ້ໄຫລກັບມາຖ້ວມລົດມ້າທັງຫລາຍ,
ພົນທະຫານ, ແລະກອງທັບທັງຫມົດຂອງຟາຣາໂອ ຊຶ່ງໄດ້ຕິດຕາມພວກເຂົາເຂົ້າໄປໃນທະເລ. ບໍ່ມີໃຜລອດຊີວິດ.
29ເຖິງຢ່າງໃດກໍຕາມ, ຊາວອິສະຣາເອນໄດ້ຍ່າງໄປຕາມດິນແຫ້ງກາງທະເລ. ນ້ຳທະເລໄດ້ຕັ້ງຂຶ້ນເຫມືອນກຳແພງສຳລັບພວກເຂົາທັງທາງຂວາ
ແລະທາງຊ້າຍ.30ດັ່ງນັ້ນ ພຣະຢາເວໄດ້ຊ່ວຍໃຫ້ອິສະຣາເອນລອດພົ້ນຈາກມືຂອງຊາວອີຢິບ,
ແລະອິສະຣາເອນກໍໄດ້ເຫັນສົບຂອງຊາວອີຢິບທີ່ແຄມທະເລ.31ເມື່ອອິສະຣາເອນໄດ້ເຫັນຣິດອຳນາດຫຍິ່ງໃຫຍ່
ຊຶ່ງພຣະຢາເວທີ່ໄດ້ເຮັດຕໍ່ຊາວອີຢິບ, ປະຊາຊົນກໍໄດ້ຖວາຍກຽດແດ່ພຣະຢາເວ, ແລະພວກເຂົາໄວ້ວາງໃຈພຣະຢາເວ ແລະ
ໂມເຊຜູ້ຮັບໃຊ້ຂອງພຣະອົງ.


generated on Tue Jun 17 19:01:42 2025

15 [1]ແລ້ວໂມເຊ ແລະ ປະຊາຊົນອິສະຣາເອນຮ້ອງເພງຖວາຍພຣະຢາເວ. ພວກເຂົາຮ້ອງວ່າ, "ຂ້ານ້ອຍຈະຮ້ອງເພງຖວາຍແດ່ພຣະຢາເວ,
ເພາະພຣະອົງໄດ້ຊົຍຊະນະຢ່າງຫຍິ່ງໃຫຍ່; ທັງມ້າ ແລະລົດມ້າ ພຣະອົງໄດ້ໂຍນລົງໃນທະເລ.

[2]ພຣະຢາເວເປັນກຳລັງຂອງຂ້ານ້ອຍ ແລະບົດເພງ, ແລະພຣະອົງເປັນຄວາມລອດຂອງຂ້ານ້ອຍ. ນີ້ແມ່ນພຣະເຈົ້າຂອງຂ້ານ້ອຍ,
ແລະຂ້ານ້ອຍຈະສັນຣະເສີນພຣະອົງ, ພຣະເຈົ້າບັນພະບຸຣຸດຂອງຂ້ານ້ອຍ, ແລະຂ້ານ້ອຍຈະຍົກຍ້ອງພຣະອົງ.[3]ພຣະຢາເວເປັນນັກຮົບ;
ພຣະຢາເວຄືພຣະນາມຂອງພຣະອົງ.
[4]ພຣະອົງໂຍນລົດມ້າ ແລະທະຫານຂອງຟາຣາໂອລົງໄປໃນທະເລ. ຂ້າຣາຊະການທີ່ຖືກເລືອກຂອງຟາອາໂຣຈົມໃນທະເລຕົ້ນກົກ.
[5]ນ້ຳໄດ້ຖ້ວມພວກເຂົາຫມົດ; ພວກເຂົາໄດ້ຈົມລົງໄປເຫມືອນກ້ອນຫີນ.
[6]ຂ້າແດ່ພຣະຢາເວ, ພຣະຫັດຂວາຂອງພຣະອົງ, ຊົງຣິດອຳນາດຫຍິ່ງໃຫຍ່; ຂ້າແດ່ພຣະຢາເວ, ພຣະຫັດຂວາຂອງພຣະອົງ,
ໄດ້ຊົງທຳລາຍສັດຕຣູເສຍ.[7]ໃນຄວາມຫຍິ່ງໃຫຍ່ ພຣະອົງໄດ້ຂວ້າຜູ້ທີ່ລຸກຂຶ້ນມາຕໍ່ສູ້ກັບພຣະອົງ. ພຣະອົງໄດ້ສົ່ງຄວາມໂກດຮ້າຍຂອງພຣະອົງ;
ມັນໄດ້ເຜົາຜານພວກເຂົາເຫມືອນກັບເຜົາໃຫມ້ຕໍເຟືອງ.[8]ໂດຍລົມທີ່ລະບາຍຈາກລົມຫາຍໃຈຂອງພຣະອົງ ນ້ຳໄດ້ກໍຕົວຂຶ້ນ;
ນ້ຳເລິກທີ່ໃຈກາງທະເລກໍແຂງຕົວ.
[9]ຝ່າຍສັດຕຣູກ່າວວ່າ, 'ຂ້ອຍຈະຕິດຕາມ, ຂ້ອຍຈະໄລ່ໃຫ້ທັນ, ຂ້ອຍຈະແບ່ງຂອງທີ່ປຸ້ນມາ; ຂ້ອຍຈະພໍໃຈທີ່ໄດ້ເຮັດກັບພວກເຂົາສົມໃຈແລ້ວ;
ຂ້ອຍຊັກດາບອອກມາ; ມືຂອງຂ້ອຍຈະທຳລາຍພວກເຂົາ.'[10]ແຕ່ພຣະອົງໄດ້ເປົ່າດ້ວຍລົມຂອງພຣະອົງ, ແລະທະເລກໍໄດ້ຖ້ວມພວກເຂົາ;
ພວກເຂົາໄດ້ຈົມລົງເຫມືອນຂີ້ກົ່ວໃນກະແສນ້ຳທະເລອັນຫຍິ່ງໃຫຍ່.[11]ໃນບັນດາພະຕ່າງໆນັ້ນ, ແມ່ນອົງໃດນໍ ຈະເຫມືອນພຣະອົງ?
ຂ້າແດ່ພຣະຢາເວ, ອົງໃດນໍຈະເຫມືອນພຣະອົງ, ຜູ້ຊົງງາມສະຫງ່າໃນຄວາມບໍຣິສຸດ, ຫນ້າຖວາຍກຽຕດ້ວຍຄຳສັນຣະເສີນ,
ຊົງເຮັດການອັດສະຈັນ?
[12]ພຣະອົງໄດ້ຢຽດພຣະຫັດຂວາຂອງພຣະອົງອອກ, ແຜ່ນດິນກໍກືນກິນພວກເຂົາ.[13]ໃນຄວາມສັດຊື່ໃນພັນທະສັນຍາຂອງພຣະອົງ
ພຣະອົງຊົງນຳປະຊາຊົນຊຶ່ງໄດ້ຊົງຊ່ວຍໃຫ້ພົ້ນ. ດ້ວຍຣິດທານຸພາບຂອງພຣະອົງໄດ້ຊົງພາພວກເຂົາມາເຖິງທີ່ອັນບໍຣິສຸດທີ່ພຣະອົງສະຖິດຢູ່.
[14]ປະຊາຊົນຈະໄດ້ຍິນ, ແລະພວກເຂົາຈະຢ້ານຫລາຍ; ການຕົກໃຈຢ້ານກໍຈະຄວບຄຸມຊາວຟີລິດສະເຕຍ.
[15]ແລ້ວພວກເຈົ້ານາຍຂອງເອໂດມຈະຢ້ານ; ພວກທະຫານຂອງໂມອາບຈະຢ້ານຈົນຕົວສັ່ນ; ຄົນການາອານທັງຫມົດຈະຫມົດກຳລັງໃຈໄປເສຍ.
[16]ການຕົກໃຈ ແລະຄວາມຢ້ານກົວຈະເກີດຂຶ້ນໃນພວກເຂົາ. ຍ້ອນຣິດອຳນາດແຫ່ງແຂນຂອງພຣະອົງ, ພວກເຂົາຈະບໍ່ເຫນັງຕິງເຫມືອນກ້ອນຫີນ
ຈົນກວ່າປະຊາຊົນຂອງພຣະອົງຜ່ານໄປ, ຂ້າແດ່ພຣະຢາເວ—ຈົນກວ່າປະຊາຊົນຊຶ່ງພຣະອົງຊ່ວຍນັ້ນຜ່ານໄປ.
[17]ພຣະອົງຈະຊົງນຳພວກເຂົາເຂົ້າມາ ແລະ ໃຫ້ພວກເຂົາຕັ້ງຫລັກແຫລ່ງເທິງພູທີ່ເປັນມໍຣະດົກຂອງພຣະອົງ, ສະຖານທີ່, ໂອ ພຣະຢາເວ,
ວ່າພຣະອົງໄດ້ເຮັດໃຫ້ຢູ່ອາໃສ, ເປັນສະຖານທີ່ນະມັດສະການ, ພຣະຜູ້ເປັນເຈົ້າຂອງພວກເຮົາ, ດ້ວຍພຣະຫັດຂອງພຣະອົງໄດ້ສ້າງຂຶ້ນ.
[18]ພຣະຢາເວຈະຄອບຄອງຢູ່ຕະຫລອດໄປ ແລະເປັນນິດ"
[19]ເພາະບັນດາມ້າຂອງຟາຣາໂອກັບລົດມ້າທັງຫລາຍຂອງເຂົາ ແລະພົນມ້າໄດ້ລົງໄປໃນທະເລ.
ພຣະຢາເວກໍໄດ້ໃຫ້ນ້ຳທະເລໄຫລກັບມາຖ້ວມພວກເຂົາເສຍ. ແຕ່ຊາວອິສະຣາເອນຍ່າງໄປເທິງດິນແຫ້ງກາງທະເລ.
[20]ນາງມີຣິອາມຜູ້ປະກາດພຣະທັມ, ເອື້ອຍຂອງອາໂຣນ, ກໍຖືກອງແຊ່ງໄປນຳ, ແລະບັນດາຜູ້ຍິງທັງຫມົດກໍຖືກອງແຊ່ງໄປນຳ,
ເຕັ້ນລຳໄປພ້ອມກັນກັບນາງ.[21]ນາງມີຣິອາມໄດ້ຮ້ອງເພງຕອບພວກເຂົາວ່າ: "ຈົ່ງຮ້ອງເພງຖວາຍພຣະຢາເວເຖີ້ນ,
ເພາະພຣະອົງໄດ້ຊົຍຊະນະຢ່າງໃຫຍ່ຫລວງ. ບັນດາມ້າ ແລະ ລົດມ້າຂອງເຂົາ ພຣະອົງໄດ້ໂຍນລົງໄປໃນທະເລ."
[22]ແລ້ວໂມເຊໄດ້ນຳອິສະຣາເອນອອກຈາກທະເລແດງ. ພວກເຂົາໄດ້ໄປຍັງຖິ່ນແຫ້ງແລ້ງກັນດານຊູເຣ.
ພວກເຂົາເດີນທາງໄປໃນຖິ່ນແຫ້ງແລ້ງກັນດານສາມມື້ ແລະ ບໍ່ພົບນ້ຳເລີຍ.[23]ຈາກນັ້ນພວກເຂົາໄດ້ມາເຖິງ ມາຣາ,
ແຕ່ພວກເຂົາກໍບໍ່ສາມາດດື່ມນ້ຳບ່ອນນັ້ນໄດ້ ເພາະນ້ຳມັນຂົມ. ດັ່ງນັ້ນພວກເຂົາຈຶ່ງເອີ້ນສະຖານທີ່ນັ້ນວ່າ ມາຣາ.
[24]ດັ່ງນັ້ນປະຊາຊົນກໍໄດ້ຈົ່ມຕໍ່ໂມເຊ ແລະອາໂຣນ, "ພວກເຮົາຈະດື່ມຫຍັງ?"[25]ໂມເຊຈຶ່ງໄດ້ຮ້ອງຫາພຣະຢາເວ,
ແລະພຣະຢາເວຈຶ່ງຊົງຊີ້ໃຫ້ລາວເຫັນຕົ້ນໄມ້ຕົ້ນຫນຶ່ງ. ເມື່ອໂມເຊໂຍນມັນລົງນ້ຳ, ແລະນ້ຳນັ້ນກໍຫວານດື່ມໄດ້.
ທີ່ນັ້ນພຣະຢາເວປຣະທານກົດຫມາຍຢ່າງເຂັ້ມງວດໃຫ້ພວກເຂົາ, ແລະທີ່ນັ້ນພຣະອົງໄດ້ທົດສອບເບິ່ງພວກເຂົາ.[26]ພຣະອົງກ່າວວ່າ,
ຖ້າເຈົ້າໃສ່ໃຈຟັງສຽງຂອງພຣະຢາເວພຣະເຈົ້າຂອງເຈົ້າ, ແລະເຮັດໃນສິ່ງທີ່ຖືກຕ້ອງໃນສາຍພຣະເນດຂອງພຣະອົງ,
ແລະຖ້າພວກເຈົ້າງ່ຽງຫູຟັງພຣະບັນຍັດ ແລະເຊື່ອຟັງກົດຫມາຍທັງຫມົດຂອງພຣະອົງ—ແລ້ວເຮົາຈະບໍ່ໃຫ້ໂຣກຕ່າງໆ
ຊຶ່ງເຮົາໃຫ້ເກີດແກ່ຊາວອີຢິບເກີດຂຶ້ນກັບພວກເຈົ້າເລຍ, ເພາະເຮົາຄືພຣະຢາເວເປັນຜູ້ປິ່ນປົວພວກເຈົ້າ.
[27]ແລ້ວພວກເຂົາໄດ້ມາເຖິງເອລິມ, ຊຶ່ງໃນທີ່ນັ້ນມີນ້ຳອອກບໍ່ສິບສອງແຫ່ງ ແລະ ມີຕົ້ນອິນທະຜາະລຳເຈັດສິບຕົ້ນ. ພວກເຂົາຕັ້ງຄ້າຍໃກ້ກັບນ້ຳນັ້ນ.


generated on Tue Jun 17 19:01:42 2025

16 [1]ປະຊາຊົນໄດ້ເດີນທາງອອກຈາກເອລິມ, ແລະຊຸມຊົນຂອງຊາວອິສະຣາເອນທັງຫມົດໄດ້ມາເຖິງຖິ່ນແຫ້ງແລ້ງກັນດານ ຊິນ,
ຊຶ່ງຢູ່ລະຫວ່າງເອລິມ ແລະ ຊີນາຍ, ໃນວັນທີສິບຫ້າເດືອນສອງ ພາຍຫລັງອອກຈາກແຜ່ນດິນອີຢິບ.
[2]ຊຸມຊົນທັງຫມົດຂອງຊາວອິສະຣາເອນຈົ່ມຕໍ່ວ່າໂມເຊ ແລະອາໂຣນໃນຖິ່ນແຫ້ງແລ້ງກັນດານ.[3]ຊາວອິສະຣາເອນກ່າວກັບພວກເຂົາວ່າ,
"ຖ້າຫາກເຮົາໄດ້ຕາຍເສຍໃນແຜ່ນດິນອີຢິບ ດ້ວຍພຣະຫັດຂອງພຣະຢາເວໃນອີຢິບ ໃນເມື່ອພວກເຮົານັ່ງຢູ່ໃກ້ຫມໍ້ຊີ້ນ
ແລະກິນເຂົ້າຈີ່ຢ່າງອີ່ມຫນຳ. ເພາະພວກເຈົ້າໄດ້ນຳພວກເຮົາມາຍັງຖິ່ນແຫ້ງແລ້ງກັນດານນີ້
ເພື່ອຈະຂ້າຄົນເຫລົ່ານີ້ທັງຫມົດຂອງເຮົາດ້ວຍຄວາມອຶດຫິວ."

[4]ແລ້ວພຣະຢາເວກ່າວກັບໂມເຊວ່າ, "ເຮົາຈະໃຫ້ອາຫານຕົກມາຈາກສະຫວັນເຫມືອນຫ່າຝົນເພື່ອເຈົ້າ. ປະຊາຊົນຈະອອກໄປ
ແລະເກັບແຕ່ພໍກິນສະເພາະມື້ຫນຶ່ງ ໃຫ້ເປັນດັ່ງນີ້ ເພື່ອວ່າເຮົາໄດ້ທົດສອບພວກເຂົາວ່າ ພວກເຂົາຈະເດີນຕາມບັນຍັດຂອງເຮົາຫລືບໍ່.
[5]ຕໍ່ມາໃນມື້ທີຫົກ, ພວກເຂົາຈະເກັບເອົາອາຫານນັ້ນຫລາຍທີ່ຈະຫລາຍໄດ້ ຊຶ່ງຫລາຍກວ່າທຸກໆມື້ທີ່ຜ່ານມາ,
ແລະພວກເຂົາຈະແຕ່ງອາຫານດ້ວຍສິ່ງທີ່ນຳເຂົ້າມາ."
[6]ແລ້ວໂມເຊ ແລະ ອາໂຣນບອກປະຊາຊົນອິສະຣາເອນທັງຫມົດວ່າ, "ໃນຕອນແລງພວກເຈົ້າຈະໄດ້ຮູ້ວ່າ
ພຣະເຢເວຜູ້ຊຶ່ງໄດ້ນຳພວກເຈົ້າອອກມາຈາກແຜ່ນດິນອີຢິບ.[7]ໃນຕອນເຊົ້າພວກເຈົ້າຈະໄດ້ເຫັນສະຫງ່າຣາສີຂອງພຣະຢາເວ,
ເພາະພຣະອົງໄດ້ຍິນສຽງຈົ່ມຂອງພວກເຈົ້າຕໍ່ສູ້ພຣະອົງ. ພວກເຮົາທັງສອງເປັນໃຜທີ່ພວກເຈົ້າຈົ່ມວ່າຕໍ່ສູ້ພວກເຮົາ?[8]ໂມເຊຍັງກ່າວອີກວ່າ,
"ພວກເຈົ້າຈະໄດ້ຮູ້ວ່າ ໃນຕອນແລງພຣະຢາເວຈະປຣະທານຊີ້ນໃຫ້ແກ່ພວກເຈົ້າ ແລະ
ໃນຕອນເຊົ້າພຣະອົງຈະປຣະທານອາຫານໃຫ້ພວກເຈົ້າໄດ້ກິນຈົນອີ່ມ—ເພາະພຣະອົງໄດ້ຍິນສຽງຈົ່ມຂອງພວກເຈົ້າຕໍ່ວ່າພຣະອົງ. ທັງອາໂຣນ
ແລະຂ້ອຍເປັນໃຜ? ພວກເຈົ້າບໍ່ໄດ້ຈົ່ມຕໍ່ວ່າພວກເຮົາ; ແຕ່ພວກເຈົ້າໄດ້ຕໍ່ວ່າພຣະຢາເວ."
[9]ໂມເຊກ່າວກັບອາໂຣນວ່າ, "ຈົ່ງບອກແກ່ຊຸມນຸມຊົນອິສະຣາເອນທັງປວງວ່າ, 'ຈົ່ງມາຢູ່ຕໍ່ພຣະພັກພຣະຢາເວ,
ເພາະພຣະອົງໄດ້ຍິນສຽງຈົ່ມຂອງພວກທ່ານແລ້ວ.'"[10]ຕໍ່ມາໃນຂະນະທີ່, ອາໂຣນກ່າວກັບຊຸມນຸມຊົນອິສະຣາເອນທັງປວງ,
ວ່າພວກເຂົາໄດ້ເບິ່ງໄປທາງຖິ່ນແຫ້ງແລ້ງກັນດານ, ແລະ, ເບິ່ງແມ, ສະຫງ່າຣາສີຂອງພຣະຢາເວປາກົດຢູ່ໃນເມກ.
[11]ແລ້ວພຣະຢາເວໄດ້ເວົ້າກັບໂມເຊ ແລະກ່າວວ່າ,[12]"ເຮົາໄດ້ຍິນສຽງຈົ່ມຂອງປະຊາຊົນອິສະຣາເອນແລ້ວ. ຈົ່ງກ່າວກັບພວກເຂົາວ່າ,
'ໃນຕອນແລງພວກເຈົ້າຈະໄດ້ກິນຊີ້ນ, ແລະໃນຕອນເຊົ້າພວກເຈົ້າຈະໄດ້ອາຫານກິນຈົນອີ່ມ.
ແລ້ວພວກເຈົ້າຈະໄດ້ຮູ້ວ່າເຮົາເປັນພຣະຢາເວພຣະເຈົ້າຂອງພວກເຈົ້າ."
[13]ພໍເຖິງຕອນແລງ ຝູງນົກຂຸ້ມໄດ້ບິນມາ ແລະປົກຄຸມເຕັນຄ້າຍ. ໃນຕອນເຊົ້າກໍມີນ້ຳຫມອກຮອບຄ້າຍ.[14]ເມື່ອນ້ຳຫມອກເຫືອໄປແລ້ວ
ມີເມັດເຫມືອນນ້ຳຫມອກແຂງຢູ່ເທິງພື້ນດິນໃນຖິ່ນແຫ້ງແລ້ງກັນດານນັ້ນ.[15]ເມື່ອປະຊາຊົນອິສະຣາເອນໄດ້ເຫັນ, ຈຶ່ງພາເວົ້າກັນວ່າ,
"ນີ້ແມ່ນຫຍັງ?" ພວກເຂົາບໍ່ຮູ້ວ່າແມ່ນຫຍັງ. ໂມເຊຈຶ່ງບອກພວກເຂົາວ່າ, "ນີ້ແມ່ນອາຫານທີ່ວ່າພຣະຢາເວໄດ້ປຣະທານໃຫ້ພວກເຈົ້າກິນ.
[16]ນີ້ເປັນສິ່ງທີ່ພຣະຢາເວໄດ້ສັ່ງໄວ້ຄື: 'ເຈົ້າຕ້ອງເກັບ, ໃຫ້ສຳລັບພວກເຈົ້າແຕ່ລະຄົນ, ໃນປະຣິມານທີ່ພວກທ່ານຈະຕ້ອງກິນ,
ຫນຶ່ງໂອເມີຕໍ່ຫນຶ່ງຄົນຂອງຄົນຂອງເຈົ້າ. ນີ້ຄືວິທີເຈົ້າຈະເກັບ:
ຈົ່ງເກັບພໍກິນສຳລັບທຸກຄົນທີ່ອາໄສຢູ່ໃນເຕັນຂອງເຈົ້າ.'"[17]ປະຊາຊົນອິສະຣາເອນກໍເຮັດຕາມນັ້ນ, ບາງຄົນເກັບຫລາຍ, ບາງຄົນເກັບຫນ້ອຍ.
[18]ເມື່ອພວກເຂົາໃຊ້ໂອເມີ, ຄົນທີ່ເກັບໄດ້ຫລາຍກໍບໍ່ມີເຫລືອ, ແລະຄົນທີ່ເກັບຫນ້ອຍກໍບໍ່ຂາດ.
ແຕ່ລະຄົນເກັບໄດ້ພຽງພໍຕໍ່ຄວາມຕ້ອງການຂອງພວກເຂົາ.
[19]ແລ້ວໂມເຊສັ່ງພວກເຂົາວ່າ, "ຢ່າໃຫ້ໃຜເກັບເຫລືອໄວ້ຈົນຮອດຕອນເຊົ້າ."[20]ເຖິງປານນັ້ນ, ພວກເຂົາຍັງບໍ່ເຊື່ອຟັງໂມເຊ.
ບາງຄົນໃນພວກເຂົາເຫລືອໄວ້ຈົນຮອດຕອນເຊົ້າ, ແຕ່ອາຫານນັ້ນກໍເນົ່າເປັນຫນອນ ແລະບູດເຫມັນ. ແລ້ວໂມເຊຈຶ່ງໄດ້ຮ້າຍຄົນເຫລົ່ານັ້ນ.
[21]ພວກເຂົາເກັບມັນທຸກໆເຊົ້າ. ພວກເຂົາເກັບພໍດີໄດ້ກິນໃນແຕ່ລະມື້. ເມື່ອແດດອອກຮ້ອນຂຶ້ນ, ມັນກໍລະລາຍໄປເສຍ.
[22]ຕໍ່ມາເມື່ອເຖິງມື້ທີຫົກ ພວກເຂົາເກັບອາຫານນັ້ນສອງເທົ່າ, ຄືສອງໂອເມີສຳລັບແຕ່ລະຄົນ. ຜູ້ນຳທັງຫມົດໃນພວກເຂົາຈຶ່ງໄດ້ເຂົ້າມາ ແລະ
ບອກໂມເຊ.[23]ລາວກ່າວກັບພວກເຂົາວ່າ, "ນີ້ຄືສິ່ງທີ່ພຣະຢາເວໄດ້ກ່າວໄວ້: 'ມື້ອື່ນເປັນວັກພັກຜ່ອນ, ເປັນສະບາໂຕບໍຣິສຸດ
ເພື່ອໃຫ້ກຽຕແດ່ພຣະຢາເວ, ຈົ່ງປີ້ງໃນສິ່ງທີ່ພວກເຈົ້າຕ້ອງການປີ້ງ, ແລະຈົ່ງຕົ້ມໃນສິ່ງທີ່ຕ້ອງການຕົ້ມ. ສ່ວນທີ່ເຫລືອທັງຫມົດຂອງພວກເຈົ້າ,
ຈົ່ງເກັບໄວ້ຈົນເຖິງຕອນເຊົ້າ.'"
[24]ເມື່ອພວກເຂົາໄດ້ເກັບໄວ້ຈົນເຖິງຕອນເຊົ້າ, ຕາມທີ່ໂມເຊໄດ້ສັ່ງນັ້ນ, ອາຫານນັ້ນກໍບໍ່ບູດເນົ່າ, ບໍ່ມີຫນອນເລີຍໃນນັ້ນ.[25]ໂມເຊກ່າວວ່າ,
"ຈົ່ງກິນອາຫານນັ້ນມື້ນີ້, ເພາະມື້ນີ້ເປັນວັນສະບາໂຕເພື່ອໃຫ້ກຽຕພຣະຢາເວ. ມື້ນີ້ພວກເຈົ້າຈະບໍ່ພົບອາຫານຢ່າງນັ້ນໃນທົ່ງຫຍ້າເລີຍ.
[26]ພວກເຈົ້າຈະເກັບອາຫານລະຫວ່າງຫົກມື້, ແຕ່ມື້ທີເຈັດເປັນວັນສະບາໂຕ. ໃນວັນສະບາໂຕຈະບໍ່ມີມານາເລີຍ.[27]ຕໍ່ມາໃນມື້ທີເຈັດ
ບາງຄົນໄດ້ອອກໄປເກັບມານາ, ແຕ່ພວກເຂົາກໍບໍ່ພົບເລີຍ.
[28]ແລ້ວພຣະຢາເວໄດ້ກ່າວກັບໂມເຊວ່າ, "ພວກເຈົ້າຈະປະຕິເສດທີ່ຈະຮັກສາຄຳສັ່ງຂອງເຮົາ ແລະກົດຫມາຍຂອງເຮົາດົນປານໃດ?[29]ເບິ່ງແມ,
ພຣະຢາເວໄດ້ຊົງປຣະທານວັນສະບາໂຕໃຫ້ພວກເຈົ້າ. ດັ່ງນັ້ນມື້ທີຫົກປຣະທານອາຫານໃຫ້ພວກເຈົ້າສອງວັນ.
ໃຫ້ແຕ່ລະຄົນພັກຢູ່ໃນທີ່ຂອງຕົນ; ຢ່າໃຫ້ໃຜອອກຈາກບ່ອນພັກໃນມື້ທີເຈັດນັ້ນເລີຍ."[30]ດັ່ງນັ້ນປະຊາຊົນຈຶ່ງໄດ້ຢຸດພັກໃນມື້ທີເຈັດ.
[31]ປະຊາຊົນອິສະຣາເອນເອີ້ນຊື່ອາຫານນັ້ນວ່າ "ມານາ." ເປັນເມັດສີຂາວເຫມືອນເມັດຜັກຊີ, ແລະມີຣົດຊາດເຫມືອນຂະຫນົມປະສົມນ້ຳເຜີ້ງ.
[32]ໂມເຊໄດ້ກ່າວວ່າ, "ພຣະຢາເວໄດ້ສັ່ງໄວ້ວ່າ: 'ຈົ່ງຜອງມານາຫນຶ່ງໂອເມີ ເກັບໄວ້ຕະຫລອດຊົ່ວຊາດພັນຂອງເຈົ້າ
ເພື່ອພວກເຂົາຈະໄດ້ເຫັນອາຫານ ຊຶ່ງເຮົາລ້ຽງພວກເຈົ້າໃນຖິ່ນແຫ້ງແລ້ງກັນດານ, ຫລັງຈາກເຮົານຳພວກເຈົ້າອອກມາຈາກແຜ່ນດິນອີຢິບ.'"
[33]ໂມເຊບອກອາໂຣນວ່າ, "ຈົ່ງເອົາຫມໍ້ຫນຶ່ງອັນ ແລະ ເອົາຫນຶ່ງໂອເມີຂອງມານາໃສ່ໃນນັ້ນ. ໃຫ້ເກັບມັນໄວ້ຕໍ່ຫນ້າພຣະຢາເວ
ໃຫ້ເກັບຮັກສາໄວ້ຕະຫລອດຊົ່ວຊາດພັນຂອງພວກເຮົາ."[34]ຕາມທີ່ພຣະຢາເວໄດ້ສັ່ງໂມເຊ,
ອາໂຣນກໍໄດ້ເກັບມັນໄວ້ຂ້າງແຜ່ນກົດບັນຍັດໃນຫີບພັນທະສັນຍາ.
[35]ປະຊາຊົນອິສະຣາເອນໄດ້ກິນມານາສີ່ສິບປີຈົນຮອດຕອນທີ່ພວກເຂົາມາເຖິງແຜ່ນດິນທີ່ຈະອາໄສຢູ່.
ພວກເຂົາກິນມານາຈົນມາເຖິງຊາຍແດນແຜ່ນດິນການາອານ.[36]ບັດນີ້ໂອເມີຫນຶ່ງເທົ່າກັບຫນຶ່ງສ່ວນສິບຂອງເອຟາ.


generated on Tue Jun 17 19:01:42 2025

# 17

[1]ຊຸມນຸມຊົນອິສະຣາເອນທັງຫມົດໄດ້ອອກເດີນທາງຈາກຖິ່ນແຫ້ງແລ້ງກັນດານຊິນ, ຕາມຄຳສັ່ງຂອງພຣະຢາເວ. ພວກເຂົາໄດ້ຕັ້ງຄ້າຍທີ່ເຣຟີດິມ,
ແຕ່ທີ່ນັ້ນບໍ່ມີນ້ຳໃຫ້ປະຊາຊົນດື່ມ.[2]ດັ່ງນັ້ນປະຊາຊົນຈຶ່ງກ່າວໂທດໂມເຊເຖິງສະຖານະການຂອງພວກເຂົາ ແລະກ່າວວ່າ,
"ຈົ່ງໃຫ້ນ້ຳພວກເຮົາດື່ມແມ." ໂມເຊຕອບວ່າ, "ພວກເຈົ້າຫາເລື່ອງເຮົາເຮັດຫຍັງ?
ເປັນຫຍັງພວກເຈົ້າຈຶ່ງທົດລອງພຣະຢາເວ?"[3]ປະຊາຊົນຫິວນ້ຳຫລາຍ, ແລະພວກເຂົາໄດ້ຈົ່ມຕໍ່ສູ້ໂມເຊ. ພວກເຂົາເວົ້າວ່າ,
"ເປັນຫຍັງທ່ານຈຶ່ງໄດ້ພາກເຮົາອອກຈາກອີຢິບ? ມາເພື່ອຈະຂ້າພວກເຮົາ ແລະ ລູກໆຂອງພວກເຮົາ ແລະ
ຝູງສັດຂອງພວກເຮົາໃຫ້ຫິວນ້ຳຕາຍຫລື?"

[4]ແລ້ວໂມເຊຈຶ່ງຮ້ອງຫາພຣະຢາເວວ່າ, "ຂ້ານ້ອຍຈະເຮັດຢ່າງໃດດີກັບປະຊາຊົນພວກນີ້?
ພວກເຂົາເກືອບເອົາຫີນຂວ້າງຂ້ານ້ອຍແລ້ວ."[5]ພຣະຢາເວຈຶ່ງໄດ້ກ່າວກັບໂມເຊວ່າ, "ຈົ່ງລ່ວງຫນ້າປະຊາຊົນໄປ
ແລະນຳພວກຜູ້ອາວຸໂສບາງຄົນຂອງອິສະຣາເອນໄປກັບເຈົ້າ. ຈົ່ງເອົາໄມ້ຄ້ອນເທົ້າທີ່ເຈົ້າໃຊ້ຕີນ້ຳ ແລະ ຈົ່ງໄປ.[6]ເຮົາຈະຢືນຢູ່ຕໍ່ຫນ້າເຈົ້າທີ່ນັ້ນ
ເທິງໂຮເຣັບ, ແລະເຈົ້າຈົ່ງຕີກ້ອນຫີນນັ້ນ. ນ້ຳກໍຈະໄຫລອອກມາຈາກຫີນໃຫ້ປະຊາຊົນດື່ມ."
ແລ້ວໂມເຊກໍເຮັດດັ່ງນັ້ນຕໍ່ຫນ້າພວກຜູ້ອາວຸໂສຂອງອິສະຣາເອນ.[7]ລາວໄດ້ເອີ້ນສະຖານທີ່ນັ້ນວ່າ ມາສາ ແລະ ເມຣິບາ
ເພາະຊາວອິສະຣາເອນຈົ່ມຕໍ່ວ່າ, ແລະເພາະພວກເຂົາໄດ້ທົດລອງພຣະຜູ້ເປັນເຈົ້າໂດຍກ່າວວ່າ, "ພຣະຢາເວສະຖິດຢູ່ກັບເຮົາຈິງຫລືບໍ່?"
[8]ແລ້ວກອງທັບຊາວອາມາເຫລັກກໍໄດ້ຍົກມາ ແລະ ໂຈມຕີອິສະຣາເອນທີ່ເຣຟີດິມ.[9]ດັ່ງນັ້ນໂມເຊໄດ້ສັ່ງໂຢຊວຍວ່າ, "ຈົ່ງເລືອກຜູ້ຊາຍບາງຄົນ,
ອອກໄປຕໍ່ສູ້ອາມາເຫລັກ. ມື້ອື່ນເຮົາຈະຢືນເທິງຍອດຂອງພູ
ພ້ອມກັບຖືໄມ້ຄ້ອນເທົ້າຂອງພຣະເຈົ້າໃນມື."[10]ດັ່ງນັ້ນໂຢຊວຍໄດ້ຕໍ່ສູ້ກັບອາມາເຫລັກຕາມຄຳສັ່ງຂອງໂມເຊ, ຂະນະທີ່ໂມເຊ, ອາໂຣນ,
ແລະຮູເຣໄດ້ຂຶ້ນໄປເທິງຍອດພູນັ້ນ.
[11]ຂະນະທີ່ໂມເຊຍົກມືຂຶ້ນເມື່ອໃດ, ອິສະຣາເອນກໍໄດ້ປຽບ: ເມື່ອລາວລົດມືລົງພັກ, ອາມາເຫລັກກໍໄດ້ປຽບເມື່ອນັ້ນ.
[12]ເມື່ອມືຂອງໂມເຊອ່ອນແຮງລົງ, ອາໂຣນ ແລະ ຮູເຣຈຶ່ງຍົກກ້ອນຫີນມາ ແລະ ວາງໃຫ້ໂມເຊນັ່ງ. ໃນເວລາດຽວກັນ, ອາໂຣນ ແລະ
ຮູເຣຈຶ່ງຍົກຊູມືຂອງລາວຂຶ້ນ, ຄົນຫນຶ່ງຢູ່ອີກຂ້າງຫນຶ່ງຂອງລາວ, ອີກຄົນຫນຶ່ງຢູ່ອີກຂ້າງຫນຶ່ງຂອງລາວ.
ດັ່ງນັ້ນມືທັງສອງເບື້ອງຂອງລາວຈຶ່ງຖືກຍົກຂຶ້ນຈົນຕາເວັນຕົກດິນ.[13]ດັ່ງນັ້ນໂຢຊວຍຈຶ່ງໄດ້ເອົາຊະນະປະຊາຊົນອາມາເຫລັກໄດ້ດ້ວຍດາບ.
[14]ພຣະຢາເວໄດ້ກ່າວກັບໂມເຊວ່າ, "ຈົ່ງຂຽນຂໍ້ຄວາມຕໍ່ໄປນີ້ລົງໃນປຶ້ມ, ແລະອ່ານໃຫ້ໂຢຊວຍຟັງນຳ,
ເພາະເຮົາຈະລົບລ້າງຊື່ອາມາເຫລັກໃຫ້ສິ້ນຊາກ ໃຫ້ຫາຍໄປຈາກຄວາມຊົງຈຳພາຍໃຕ້ຟ້ານີ້."[15]ແລ້ວໂມເຊໄດ້ສ້າງແທ່ນບູຊາ
ແລະລາວເອີ້ນແທ່ນນັ້ນວ່າ "ພຣະຢາເວເປັນທຸງຂອງຂ້ານ້ອຍ."[16]ລາວກ່າວວ່າ, "ເພາະມີມືຫນຶ່ງຍົກຂຶ້ນໄປຍັງບັນລັງຂອງພຣະຢາເວ—
ວ່າພຣະຢາເວຈະເຮັດສົງຄາມກັບອາມາເຫລັກທຸກຊົ່ວຊາດພັນ."


generated on Tue Jun 17 19:01:42 2025

18 1ເຢທະໂຣ, ປະໂລຫິດແຫ່ງມີດີອານ, ພໍ່ເຖົ້າຂອງໂມເຊ, ໄດ້ຍິນເຖິງກິດຈະການຢ່າງທີ່ພຣະເຈົ້າໄດ້ເຮັດເພື່ອໂມເຊ
ແລະອິສະຣາເອນປະຊາຊົນຂອງພຣະອົງ. ລາວໄດ້ຍິນວ່າພຣະຢາເວນຳອິສະຣາເອນອອກຈາກອີຢິບ.2ເຢທະໂຣ, ພໍ່ເຖົ້າຂອງໂມເຊ,
ໄດ້ພາຊິບໂປຣາ, ເມຍຂອງໂມເຊ, ຫລັງຈາກທີ່ໂມເຊສົ່ງນາງກັບເມືອເຮືອນ.3ພ້ອມກັບລູກຊາຍທັງສອງຂອງນາງ; ລູກຊາຍຄົນຫນຶ່ງຊື່ ເກໂຊມ,
ເພາະໂມເຊໄດ້ກ່າວວ່າ, "ຂ້ານ້ອຍເປັນຄົນຕ່າງດ້າວໃນຕ່າງແດນ."4ອີກຄົນຫນຶ່ງຊື່ວ່າເອລີເອເຊ, ເພາະໂມເຊໄດ້ກ່າວວ່າ,
"ພຣະເຈົ້າຂອງບັນພະບຸຣຸດຂ້ານ້ອຍ ເປັນຜູ້ອຸປະຖຳຂອງຂ້ານ້ອຍ. ພຣະອົງຊ່ວຍຂ້ານ້ອຍຈາກຄົມດາບຂອງຟາຣາໂອ."

5ເຢທະໂຣ, ພໍ່ເຖົ້າຂອງໂມເຊ, ພາລູກໆຂອງໂມເຊ ແລະພາເມຍຂອງລາວມາຫາໂມເຊໃນຖິ່ນແຫ້ງແລ້ງກັນດານ
ບ່ອນທີ່ລາວຕັ້ງຄ້າຍຢູ່ທີ່ພູຂອງພຣະເຈົ້າ.6ລາວໄດ້ບອກໂມເຊວ່າ, "ຂ້ອຍ, ເຢທະໂຣພໍ່ເຖົ້າຂອງເຈົ້າ, ຂ້ອຍກຳລັງມາພ້ອມກັບເມຍ ແລະ
ລູກທັງສອງຂອງເຈົ້າ."
7ໂມເຊອອກໄປພົບພໍ່ເຖົ້າ, ຂາບລົງ, ແລະຈູບລາວ. ພວກເຂົາຖາມສຸກທຸກຂອງກັນແລະກັນ ແລະແລ້ວຈຶ່ງພາເຂົ້າໄປໃນເຕັນ.
8ໂມເຊເລົ່າໃຫ້ພໍ່ເຖົ້າຂອງຕົນຟັງເຖິງ ທຸກສິ່ງທີ່ພຣະຢາເວໄດ້ເຮັດກັບຟາຣາໂອ ແລະ ຊາວອີຢິບ ເພາະເຫັນແກ່ອິສະຣາເອນ,
ທັງຄວາມທຸກຍາກລຳບາກທຸກຢ່າງໄດ້ເກີດຂຶ້ນໃນລະຫວ່າງການເດີນທາງ, ແລະວິທີທີ່ພຣະຢາເວໄດ້ຊ່ວຍພວກເຂົາໃຫ້ພົ້ນພັຍ.
9ເຢທະໂຣກໍຊື່ນຊົມຍິນດີ ທີ່ໄດ້ຮູ້ເຖິງຄວາມດີທັງຫມົດ ຊຶ່ງພຣະຢາເວໄດ້ເຮັດເພື່ອອິສະຣາເອນ,
ໃນການທີ່ພຣະອົງໄດ້ຊ່ວຍພວກເຂົາໃຫ້ລອດພົ້ນຈາກມືຂອງຊາວອີຢິບ.10ເຢທະໂຣໄດ້ກ່າວວ່າ, "ສາທຸການແດ່ພຣະຢາເວ,
ຜູ້ໄດ້ຊ່ວຍເຈົ້າໃຫ້ລອດພົ້ນຈາກມືຂອງຊາວອີຢິບ ແລະຈາກມືຂອງຟາຣາໂອ, ແລະປົດປ່ອຍປະຊາຊົນໃຫ້ພົ້ນຈາກມືຂອງຊາວອີຢິບ.
11ບັດນີ້ຂ້ານ້ອຍຮູ້ວ່າພຣະຢາເວເປັນໃຫຍ່ກວ່າພະທັງຫລາຍ, ເພາະເມື່ອຊາວອີຢິບກົດຂີ່ຊາວອິສະຣາເອນຢ່າງເຫັນແກ່ຕົວ,
ພຣະເຈົ້າໄດ້ຊ່ວຍປະຊາຊົນຂອງພຣະອົງ.
12ເຢທະໂຣ, ພໍ່ເຖົ້າຂອງໂມເຊ, ໄດ້ນຳເຄື່ອງເຜົາບູຊາ ແລະ ຖວາຍບູຊາແດ່ພຣະເຈົ້າ.
ສ່ວນອາໂຣນກັບບັນດາຜູ້ອາວຸໂສຂອງອິສະຣາເອນໄດ້ມາກິນລ້ຽງກັບພໍ່ເຖົ້າຂອງໂມເຊ ຕໍ່ພຣະພັກພຣະເຈົ້າ.
13ໃນມື້ຕໍ່ໄປ ໂມເຊນັ່ງລົງຕັດສິນຄະດີໃຫ້ປະຊາຊົນ. ປະຊາຊົນຢືນອ້ອມລາວຕັ້ງແຕ່ເຊົ້າຈົນຮອດຄ່ຳ.14ເມື່ອພໍ່ເຖົ້າຂອງໂມເຊເຫັນທຸກຢ່າງ
ທີ່ໂມເຊໄດ້ເຮັດເພື່ອປະຊາຊົນ, ລາວກ່າວວ່າ, "ນີ້ເຈົ້າໃຊ້ວິທີອັນໃດປະຕິບັດກັບປະຊາຊົນນີ້? ເປັນຫຍັງເຈົ້າຈຶ່ງນັ່ງເຮັດວຽກຢູ່ຄົນດຽວ ແລະ
ປະຊາຊົນທັງຫມົດກໍ່ຢືນອ້ອມເຈົ້າຕັ້ງແຕ່ເຊົ້າຈົນຮອດຄ່ຳ?"
15ໂມເຊໄດ້ຕອບພໍ່ເຖົ້າວ່າ, "ປະຊາຊົນມາຫາຂ້ານ້ອຍ ເພື່ອຂໍໃຫ້ທູນຖາມເຖິງຄຳຊີ້ນຳຂອງພຣະເຈົ້າ.16ເມື່ອພວກເຂົາມີການໂຕ້ຖຽງກັນ,
ພວກເຂົາກໍມາຫາຂ້ອຍ. ຂ້ານ້ອຍກໍຕັດສິນຄະດີລະຫວ່າງຄົນຫນຶ່ງກັບອີກຄົນຫນຶ່ງ, ແລະຂ້ອຍກໍສອນພວກເຂົາໃຫ້ຮູ້ກົດເກນຂອງພຣະເຈົ້າ
ແລະ ພຣະບັນຍັດຂອງພຣະອົງ."
17ພໍ່ເຖົ້າຂອງໂມເຊກ່າວກັບລາວວ່າ, "ສິ່ງທີ່ເຈົ້າເຮັດແມ່ນສິ່ງທີ່ບໍ່ດີຫລາຍ.18ແນ່ນອນເຈົ້າຈະອ່ອນແຮງເອງ,
ທັງເຈົ້າແລະປະຊາຊົນຜູ້ທີ່ຢູ່ກັບເຈົ້າດ້ວຍ. ພາລະນີ້ຫນັກເກີນກຳລັງຂອງເຈົ້າ. ເຈົ້າບໍ່ສາມາດເຮັດໄດ້ຄົນດຽວດອກ.19ຈົ່ງຟັງຂ້ອຍເຖີ້ນ.
ຂ້ອຍຈະໃຫ້ຄຳແນະນຳແກ່ເຈົ້າ, ແລະຂໍໃຫ້ພຣະເຈົ້າສະຖິດກັບເຈົ້າດ້ວຍ, ເພາະເຈົ້າເປັນຜູ້ແທນຂອງປະຊາຊົນຕໍ່ພຣະເຈົ້າ,
ແລະເຈົ້ານຳຄວາມຂັດແຍ່ງມາແຈ້ງແກ່ພຣະອົງ.20ເຈົ້າຈົ່ງສັ່ງສອນພວກເຂົາໃຫ້ຮູ້ກົດເກນແລະພຣະບັນຍັດ.
ເຈົ້າຕ້ອງຊີ້ທາງແກ່ພວກເຂົາເຖິງການດຳເນີນຊີວິດ ແລະ ສິ່ງທີ່ຕ້ອງປະຕິບັດ.
21ຍິ່ງໄປກວ່ານັ້ນ, ເຈົ້າຈົ່ງເລືອກຄົນທີ່ມີຄວາມສາມາດຈາກປະຊາຊົນທັງຫມົດ, ຊາຍທີ່ຖວາຍກຽດແດ່ພຣະເຈົ້າ, ຊາຍທີ່ຮັກຄວາມຈິງ
ຜູ້ທີ່ຊັງການໄດ້ຮັບຄວາມບໍ່ຍຸຕິທັມ. ເຈົ້າຈົ່ງແຕ່ງຕັ້ງຄົນຢ່າງນີ້ໄວ້ເຫນືອປະຊາຊົນ, ເພື່ອໃຫ້ເປັນຜູ້ນຳໃນການດູແລຄົນພັນຄົນແດ່, ຮ້ອຍຄົນແດ່,
ຫ້າສິບຄົນແດ່ ແລະສິບຄົນແດ່.22ພວກເຂົາຈະພິພາກສາຄະດີຂອງປະຊາຊົນທຸກກໍລະນີທີ່ເກີດເປັນກິຈະວັດປະຈຳວັນ,
ແຕ່ທີ່ຄະດີຍາກໆໃຫ້ພວກເຂົານຳມາແຈ້ງຕໍ່ເຈົ້າ. ແຕ່ສ່ວນຄະດີເລັກໆນ້ອຍໆ, ໃຫ້ພວກເຂົາຕັດສິນກັນເອງ.
ດ້ວຍວິທີນີ້ຈະເຮັດໃຫ້ວຽກງານຂອງເຈົ້າເບົາລົງ, ແລະພວກເຂົາຈະແບກພາລະຮ່ວມກັບເຈົ້າ.23ຖ້າເຈົ້າເຮັດດັ່ງນີ້,
ແລະຖ້າພຣະເຈົ້າສັ່ງເຈົ້າໃຫ້ເຮັດເຊັ່ນນັ້ນ, ແລ້ວເຈົ້າກໍສາມາດທົນໄດ້,
ແລະປະຊາຊົນທັງຫມົດນີ້ກໍຈະໄປຍັງທີ່ອາໄສຂອງພວກເຂົາດ້ວຍຄວາມພໍໃຈ."
24ສະນັ້ນໂມເຊກໍເຊື່ອຟັງຖ້ອຍຄຳຂອງພໍ່ເຖົ້າຂອງລາວ ແລະ ເຮັດຕາມທີ່ລາວໄດ້ກ່າວທຸກປະການ.
25ໂມເຊຈຶ່ງໄດ້ເລືອກຄົນທີ່ມີຄວາມສາມາດຈາກອິສະຣາເອນທັງຫມົດ ແລະ ຕັ້ງເຂົາໃຫ້ເປັນຫົວຫນ້າຂອງປະຊາຊົນ, ຜູ້ນຳເຫລົ່ານີ້ດູແລພັນຄົນ,
ຮ້ອຍຄົນ, ຫ້າສິບຄົນ, ແລະສິບຄົນ.26ພວກເຂົາໄດ້ພິພາກສາຄະດີຂອງປະຊາຊົນໃນສະຖານະການປົກກະຕິ.
ໃນຄະດີຍາກໆພວກເຂົາກໍໄດ້ນຳໄປແຈ້ງໂມເຊ, ແຕ່ພວກເຂົາເອງພິພາກສາຄະດີນ້ອຍໆທັງຫມົດ.27ແລ້ວໂມເຊໄດ້ສົ່ງພໍ່ເຖົ້າຂອງລາວກັບໄປ,
ແລະເຢທະໂຣກໍໄດ້ກັບໄປຍັງແຜ່ນດິນຂອງເພິ່ນເອງ.

# 19

1ໃນເດືອນທີສາມຫລັງຈາກປະຊາຊົນອິສະຣາເອນໄດ້ອອກຈາກແຜ່ນດິນອີຢິບ, ໃນມື້ດຽວກັນນັ້ນ,
ພວກເຂົາໄດ້ມາເຖິງຖິ່ນແຫ້ງແລ້ງກັນດານຊີນາຍ. 2ຫລັງຈາກພວກເຂົາອອກຈາກເຣຟີດິມ ແລະມາເຖິງຖິ່ນແຫ້ງແລ້ງກັນດານຊີນາຍ,
ພວກເຂົາກໍຕັ້ງຄ້າຍຢູ່ໃນຖິ່ນແຫ້ງແລ້ງກັນດານທາງດ້ານຫນ້າພູ.

3ໂມເຊໄດ້ຂຶ້ນໄປຫາພຣະເຈົ້າ. ພຣະຢາເວກ່າວກັບລາວຈາກພູ ແລະກ່າວວ່າ, "ຈົ່ງບອກໃຫ້ຄົວເຮືອນຂອງຢາໂຄບ, ປະຊາຊົນອິສະຣາເອນ:
4ພວກເຈົ້າໄດ້ເຫັນສິ່ງທີ່ເຮົາເຮັດກັບຊາວອີຢິບ, ເຖິງວິທີທີ່ເຮົາອູ້ມຊູພວກເຈົ້າຂຶ້ນເຫມືອນປີກຂອງນົກອິນຊີ
ແລະນຳພວກເຈົ້າໂດຍນຳພວກເຈົ້າມາເຖິງເຮົາ. 5ບັດນີ້, ຖ້າພວກເຈົ້າເຊື່ອຟັງສຽງຂອງເຮົາ ແລະ ຮັກສາພັນທະສັນຍາຂອງເຮົາໄວ້,
ແລ້ວພວກເຈົ້າກໍຈະເປັນສົມບັດພິເສດຂອງເຮົາ ໃນທ່າມກາງຂອງປະຊາຊາດທັງຫລາຍ, ເພາະແຜ່ນດິນທັງປວງເປັນຂອງເຮົາ.
6ພວກເຈົ້າຈະເປັນອານາຈັກປະໂລຫິດ ແລະເປັນຊົນຊາດບໍຣິສຸດສຳລັບເຮົາ. ເຫລົ່ານີ້ເປັນຖ້ອຍຄຳທີ່ເຈົ້າຕ້ອງບອກກັບປະຊາຊົນອິສະຣາເອນ."
7ດັ່ງນັ້ນໂມເຊຈຶ່ງມາ ແລະເອີ້ນປະຊຸມພວກຜູ້ອາວຸໂສຂອງປະຊາຊົນ.
ລາວປະກາດຖ້ອຍຄຳເຫລົ່ານີ້ທັງຫມົດຕໍ່ຫນ້າພວກເຂົາຕາມທີ່ພຣະຢາເວໄດ້ສັ່ງລາວ. 8ປະຊາຊົນທັງຫມົດໄດ້ຕອບພ້ອມກັນວ່າ,
"ພວກເຮົາຈະເຮັດທຸກສິ່ງຕາມທີ່ພຣະຢາເວໄດ້ກ່າວ." ແລ້ວໂມເຊກໍມາລາຍງານຖ້ອຍຄຳຂອງປະຊາຊົນແກ່ພຣະຢາເວ.
9ພຣະຢາເວກ່າວກັບໂມເຊວ່າ, "ເຮົາຈະມາຫາເຈົ້າໃນເມກຫນາທຶບ ເພື່ອວ່າປະຊາຊົນຈະບໍ່ໄດ້ຍິນໃນສິ່ງທີ່ເຮົາເວົ້າກັບເຈົ້າ
ແລະຈະໄດ້ເຊື່ອເຈົ້າຕະຫລອດໄປ." ແລ້ວໂມເຊບອກຖ້ອຍຄຳຂອງປະຊາຊົນສູ່ພຣະຢາເວຟັງ.
10ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງໄປຫາປະຊາຊົນ, ມື້ນີ້ແລະມື້ອື່ນ ເຈົ້າຕ້ອງໃຫ້ພວກເຂົາຊຳລະຕົນໃຫ້ບໍຣິສຸດສຳລັບເຮົາ, ແລະ
ໃຫ້ພວກເຂົາຊຳລະເສື້ອຜ້າໃຫ້ຂອງຕົນໃຫ້ສະອາດ. 11ຈົ່ງຕຽມຕົວໃຫ້ພ້ອມໃນວັນທີສາມ, ເພາະໃນມື້ທີສາມພຣະຢາເວຈະລົງມາທີ່ພູຊີນາຍ.
12ເຈົ້າຈົ່ງກຳຫນົດເຂດໃຫ້ປະຊາຊົນຢູ່ຮອບພູ, ຈົ່ງກ່າວກັບເຂົາວ່າ, "ຈົ່ງລະວັງໃຫ້ດີ ພວກເຈົ້າຢ່າຂຶ້ນໄປເທິງພູ ຫລື ແມ່ນແຕ່ແຕະຕ້ອງແດນມັນ.
ໃຜເອົາແຕະຕ້ອງພູຈະຕ້ອງມີໂທດເຖິງຕາຍຢ່າງແນ່ນອນ.' 13ຫ້າມບໍ່ໃຫ້ໃຜແຕະຕ້ອງຜູ້ນັ້ນ. ແທນທີ່ຈະເປັນເຊັ່ນນັ້ນ, ລາວຕ້ອງຖືກຂວ້າງ
ຫລືຍິງດ້ວຍກ້ອນຫີນ. ບໍ່ວ່າຈະເປັນຄົນ ຫລືສັດ, ກໍຕ້ອງຖືກລົງໂທດເຖິງຕາຍ, ເມື່ອມີສຽງແກເປົ່າຍາວ, ໃຫ້ພວກເຂົາເຂົ້າມາໃກ້ຕີນພູໄດ້."
14ແລ້ວໂມເຊລົງຈາກພູມາຫາປະຊາຊົນ. ລາວໃຫ້ປະຊາຊົນຊຳລະຕົວແດ່ພຣະຢາເວ ແລະພວກເຂົາຊັກເສື້ອຜ້າຂອງພວກເຂົາ.
15ລາວກ່າວກັບປະຊາຊົນວ່າ, "ຈົ່ງຕຽມຕົວໃຫ້ພ້ອມໃນມື້ທີສາມ; ຢ່າເຂົ້າໃກ້ເມຍຂອງພວກເຈົ້າ."
16ໃນມື້ທີສາມ, ເມື່ອເຖິງຕອນເຊົ້າ, ຟ້າກໍຮ້ອງແລະຟ້າແມບເມກຫນາປົກຄຸມເທິງພູ, ແລະມີສຽງເປົ່າແກດັງຫລາຍ,
ຈົນປະຊາຊົນທັງຫມົດຢູ່ໃນຄ້າຍຢ້ານຫລາຍຈົນໂຕສັ່ນ. 17ໂມເຊນຳປະຊາຊົນໃຫ້ອອກມາຈາກຄ້າຍໄປເພື່ອພົບພຣະເຈົ້າ,
ແລະພວກເຂົາມາຢືນຢູ່ຕີນພູ. 18ພູຊີນາຍມີຄວັນປົກຄຸມຢູ່ທັງຫມົດ ເພາະພຣະຢາເວສະເດັດລົງມາເທິງພູນັ້ນໃນໄຟແລະຄວັນ.
ເຫມືອນຄວັນຈາກເຕົາເຜົາ, ແລະຫນ່ວຍພູທັງຫມົດກໍສັ່ນຢ່າງຮຸນແຮງ.
19ເມື່ອສຽງແກຍິ່ງດັງຂຶ້ນ ແລະດັງຂຶ້ນ, ໂມເຊໄດ້ເວົ້າ, ແລະພຣະເຈົ້າໄດ້ຕອບສຽງຂອງລາວ. 20ພຣະຢາເວລົງມາເທິງພູຊີນາຍ, ຢູ່ເທິງຍອດພູ,
ແລະພຣະອົງເອີ້ນໂມເຊໃຫ້ຂຶ້ນໄປຍອດພູ, ດັ່ງນັ້ນໂມເຊຈຶ່ງຂຶ້ນໄປ. 21ພຣະຢາວາກ່າວກັບໂມເຊວ່າ, "ຈົ່ງລົງໄປ
ແລະເຕືອນປະຊາຊົນຢ່າໃຫ້ຜູ້ໃດລ່ວງລ້ຳເຂົ້າມາເບິ່ງເຮົາ, ຫລືຈະໃຫ້ເຮົາລົງໂທດພວກເຂົາເຖິງຕາຍ. 22ໃຫ້ພວກປະໂລຫິດທີ່ເຂົ້າມາໃກ້ເຮົານັ້ນ
ໃຫ້ພວກເຂົາຊຳລະຕົວໃຫ້ບໍຣິສຸດ—ຕຽມຕົວເອງໃຫ້ພ້ອມຕໍ່ການມາຂອງເຮົາ—ເພື່ອວ່າເຮົາຈະບໍ່ປະຫານພວກເຂົາ."
23ໂມເຊກ່າວກັບພຣະຢາເວວ່າ, "ປະຊາຊົນຂຶ້ນມາເທິງພູບໍ່ໄດ້, ເພາະພຣະອົງຊົງສັ່ງພວກຂ້ານ້ອຍວ່າ: ຈົ່ງກັ້ນເຂດຮອບພູນັ້ນ
ແລະກັນໄວ້ສຳລັບພຣະຢາເວ.'" 24ພຣະຢາເວກ່າວກັບລາວວ່າ, "ຈົ່ງໄປ, ລົງໄປຈາກພູ, ແລະພາອາໂຣນຂຶ້ນມາກັບເຈົ້າ,
ແຕ່ຢ່າໃຫ້ພວກປະໂລຫິດ ແລະປະຊາຊົນລ່ວງລ້ຳເຂດແດນທີ່ຈະຂຶ້ນມາເຖິງເຮົາ,
ຫລືຈະໃຫ້ເຮົາປະຫານພວກເຂົາ." 25ດັ່ງນັ້ນໂມເຊກໍໄດ້ລົງໄປຫາປະຊາຊົນ ແລະ ໄດ້ບອກພວກເຂົາ.

 generated on Tue Jun 17 19:01:42 2025

20 [1]ພຣະເຈົ້າກ່າວຖ້ອຍຄຳເຫລົ່ານີ້ທັງຫມົດ:[2]"ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ, ຜູ້ໄດ້ນຳພວກເຈົ້າອອກມາຈາກແຜ່ນດິນອີຢິບ,
ຄືໃຫ້ອອກຈາກເຮືອນທາດ.[3]ພວກເຈົ້າຕ້ອງບໍ່ມີພຣະເຈົ້າອື່ນໃດຕໍ່ຫນ້າເຮົາ.

[4]ພວກເຈົ້າຕ້ອງບໍ່ເຮັດຮູບແກະສະຫລັກໃດສຳລັບຕົນ ຫລືຮູບເຫມືອນຂອງສິ່ງໃດ ຊຶ່ງມີຢູ່ໃນຟ້າສະຫວັນເບື້ອງເທິງ,
ຫລືໃນແຜ່ນດິນໂລກເບື້ອງລຸ່ມ, ຫລືສິ່ງທີ່ຢູ່ໃນນ້ຳເບື້ອງລຸ່ມ.[5]ພວກເຈົ້າຕ້ອງບໍ່ຂາບໄຫວ້ພວກມັນ ຫລືນະມັດສະການພວກມັນ, ເພາະເຮົາ,
ພຣະຢາເວພຣະເຈົ້າຂອງພວກເຈົ້າ, ເປັນພຣະເຈົ້າຜູ້ຫວງແຫນ.
ເຮົາລົງໂທດຄວາມຊົ່ວຂອງບັນພະບຸຣຸດໂດຍນຳການລົງໂທດຕົກທອດໄປເຖິງລູກຫລານ. ເຖິງສາມ ແລະ ສີ່ເຊັ່ນຄົນຜູ້ທີ່ເຮົາກຽດຊັງ.
[6]ແຕ່ເຮົາສຳແດງຄວາມສັດຊື່ຕໍ່ພັນທະສັນຍາຕໍ່ຄົນນັບພັນ ຜູ້ທີ່ຮັກເຮົາ ແລະຖືຮັກສາພຣະບັນຍັດທັງຫລາຍຂອງເຮົາ.
[7]ພວກເຈົ້າຈະຕ້ອງບໍ່ອອກພຣະນາມຂອງພຣະຢາເວພຣະເຈົ້າຂອງພວກເຈົ້າໄປໃນທາງທີ່ຜິດ,
ເພາະເຮົາຈະບໍ່ເອົາໂທດຄົນທີ່ໃຊ້ພຣະນາມຂອງເຮົາໄປໃນທາງທີ່ຜິດກໍບໍ່ໄດ້.
[8]ຈົ່ງລະນຶກເຖິງວັນສະບາໂຕ, ໃຫ້ຖືເປັນວັນບໍຣິສຸດຕໍ່ເຮົາ.[9]ເຈົ້າຈົ່ງເຮັດວຽກທັງສິ້ນຂອງພວກເຈົ້າຕະຫລອດຫົກວັນ.
[10]ແຕ່ໃນມື້ທີເຈັດນັ້ນຖືເປັນສະບາໂຕແດ່ພຣະຢາເວພຣະເຈົ້າຂອງພວກເຈົ້າ. ໃນມື້ນັ້ນພວກເຈົ້າຕ້ອງບໍ່ເຮັດວຽກງານໃດໆ, ທັງພວກເຈົ້າ,
ຫລືລູກຊາຍ, ຫລືລູກຍິງ, ຫລືທາດຊາຍ, ຫລືທາດຍິງ, ຫລືສັດລ້ຽງ, ຫລືຄົນຕ່າງດ້າວທີ່ອາໄສໃນປະຕູເມືອງທັງຫລາຍຂອງພວກເຈົ້າ.
[11]ເພາະໃນຫົກມື້ພຣະຢາເວໄດ້ສ້າງຟ້າສະຫວັນ ແລະແຜ່ນດິນໂລກ, ທະເລ, ແລະທຸກສິ່ງໃນທີ່ເຫລົ່ານັ້ນ, ແລະພັກຜ່ອນໃນມື້ທີເຈັດ.
ສະນັ້ນພຣະຢາເວໄດ້ອວຍພອນວັນສະບາໂຕ ແລະຕັ້ງມື້ນັ້ນໃຫ້ເປັນວັນບໍຣິສຸດ.
[12]ຈົ່ງໃຫ້ກຽດແກ່ບິດາ ແລະ ມານດາຂອງພວກເຈົ້າ, ເພື່ອພວກເຈົ້າຈະມີຊີວິດຍືນຍາວເທິງແຜ່ນດິນ
ຊຶ່ງພຣະຢາເວພຣະເຈົ້າຂອງພວກເຈົ້າຈະໃຫ້ແກ່ພວກເຈົ້າ.[13]ພວກເຈົ້າຕ້ອງບໍ່ຂ້າຄົນ.[14]ພວກເຈົ້າຕ້ອງບໍ່ເຮັດຜິດປະເວນີ.
[15]ພວກເຈົ້າຕ້ອງບໍ່ລັກຊັບຈາກຜູ້ອື່ນ.[16]ພວກເຈົ້າຕ້ອງບໍ່ເປັນພະຍານບໍ່ຈິງໃສ່ຮ້າຍເພື່ອນບ້ານ.[17]ພວກເຈົ້າຕ້ອງບໍ່ໂລບບ້ານເຮືອນຂອງເພື່ອນບ້ານ;
ທາດຊາຍຂອງລາວ, ທາດຍິງຂອງລາວ, ງົວຂອງລາວ, ລວາຂອງລາວ, ຫລືສິ່ງໃດໆຊຶ່ງເປັນຂອງເພື່ອນບ້ານ."
[18]ປະຊາຊົນທັງຫມົດເຫັນຟ້າແມບ ແລະໄດ້ຍິນສຽງຟ້າຮ້ອງ, ແລະໄດ້ຍິນສຽງແກ, ແລະໄດ້ເຫັນຄວັນຈາກພູ. ເມື່ອປະຊາຊົນເຫັນສິ່ງນີ້,
ພວກເຂົາກໍຢ້ານກົວຈົນຕົວສັ່ນ ແລະຢືນຢູ່ໄກໆ.[19]ພວກຂົາຈຶ່ງກ່າວກັບໂມເຊວ່າ, "ຈົ່ງບອກພວກເຮົາເຖີ້ນ, ແລະພວກເຮົາຈະຟັງ;
ແຕ່ຢ່າໃຫ້ພຣະເຈົ້າກ່າວກັບພວກເຮົາເລີຍ, ຫລືພວກເຮົາຈະຕາຍ."[20]ໂມເຊກ່າວກັບປະຊາຊົນວ່າ, "ຢ່າຢ້ານເລີຍ,
ເພາະພຣະເຈົ້າໄດ້ມາເພື່ອທົດສອບເບິ່ງພວກເຈົ້າ ເພື່ອການໃຫ້ກຽດພຣະອົງຈະຢູ່ໃນພວກເຈົ້າ,
ແລະເພື່ອວ່າພວກເຈົ້າຈະບໍ່ເຮັດບາບ."[21]ດັ່ງນັ້ນປະຊາຊົນຈຶ່ງໄດ້ຢືນຢູ່ໄກໆ, ແລະໂມເຊເຂົ້າໄປໃຫ້ຄວາມມືດຫນາ ບ່ອນທີ່ພຣະເຈົ້າສະຖິດຢູ່.
[22]ພຣະຢາເວກ່າວກັບໂມເຊວ່າ, "ສິ່ງນີ້ແຫລະ ທີ່ເຈົ້າຕ້ອງບອກຊາວອິສະຣາເອນຄື: 'ພວກເຈົ້າເອງໄດ້ເຫັນແລ້ວວ່າ
ເຮົາໄດ້ເວົ້າກັບເຈົ້າຈາກສະຫວັນ.[23]ພວກເຈົ້າຕ້ອງບໍ່ເຮັດຮູບພະອື່ນໃດ ສຳລັບພວກເຈົ້າເອງມາທຽບກັບເຮົາ, ບໍ່ວ່າພະເຈົ້ານັ້ນເຮັດດ້ວຍເງິນ ຫລື
ຄຳ.
[24]ພວກເຈົ້າຕ້ອງທຳແທ່ນບູຊາທີ່ເຮັດດ້ວຍດິນສຳລັບເຮົາ. ແລະພວກເຈົ້າຕ້ອງຖວາຍບູຊາດ້ວຍເຄື່ອງເຜົາບູຊາຂອງເຈົ້າ,
ເຄື່ອງຖວາຍເພື່ອຄວາມສາມັກຄີທັມ, ດ້ວຍແກະ, ແລະງົວ. ໃນທຸກບ່ອນທີ່ເຮົາຕ້ອງການໄດ້ຮັບກຽດນາມຊື່ຂອງເຮົາ. ເຮົາຈະມາຫາພວກເຈົ້າ
ແລະອວຍພອນພວກເຈົ້າ.[25]ຖ້າພວກເຈົ້າສ້າງແທ່ນບູຊາດ້ວຍຫີນ, ພວກເຈົ້າຕ້ອງບໍ່ສ້າງດ້ວຍຫີນທີ່ຕົກແຕ່ງແລ້ວ.
ເພາະຖ້າພວກເຈົ້າໃຊ້ເຄື່ອງມືຕົກແຕ່ງມັນ. ພວກເຈົ້າຈະເຮັດໃຫ້ຫີນເປັນມົນທິນ.[26]ພວກເຈົ້າຕ້ອງບໍ່ເດີນຕາມຂັ້ນໄດໄປຍັງແທ່ນບູຊາຂອງເຮົາ;
ເພື່ອປ້ອງກັນພວກເຈົ້າບໍ່ໃຫ້ເຫັນຂອງລັບຂອງພວກເຈົ້າ.'"

21 [1]"ຕໍ່ໄປນີ້ເປັນກົດຕ່າງໆຊຶ່ງເຈົ້າຕ້ອງຕັ້ງໄວ້ຕໍ່ຫນ້າເຂົາທັງຫລາຍຄື:

[2]ຖ້າເຈົ້າຊື້ທາດເຮັບເຣີໄວ້ເປັນທາດ, ລາວຈະຈະຮັບໃຊ້ເຈົ້າຫົກປີ, ແລະໃນປີທີເຈັດລາວຈະໄດ້ເປັນອິສະຣະໂດຍບໍ່ຕ້ອງເສຍຄ່າໄຖ່.
[3]ຖ້າລາວມາຄົນດຽວ, ລາວຈະເປັນອິສະຣະພຽງຄົນດຽວ; ຖ້າລາວແຕ່ງງານມານຳ, ແລ້ວເມຍຂອງລາວຕ້ອງເປັນອິສະຣະດ້ວຍ.
[4]ຖ້ານາຍຫາເມຍໃຫ້ລາວ ແລະນາງນັ້ນເກີດລູກຊາຍ ຫລືລູກສາວ, ເມຍແລະລູກຂອງນາງຈະເປັນຂອງນາຍ,
ແລະລາວຈະຕ້ອງເປັນອິສະຣະພຽງຜູ້ດຽວ.
[5]ແຕ່ຖ້າທາດນັ້ນເວົ້າມາຢ່າງຊັດເຈນວ່າ, "ຂ້ານ້ອຍຮັກນາຍ, ຮັກເມຍ, ແລະ ລູກຂອງຂ້ານ້ອຍ;
ຂ້ານ້ອຍຈະບໍ່ຢາກອອກໄປເປັນອິສະຣະ."[6]ແລ້ວໃຫ້ນາຍນັ້ນພາທາດນັ້ນໄປເຝົ້າພຣະເຈົ້າ. ນາຍຕ້ອງພາລາວໄປທີ່ປະຕູ ຫລືເສົາປະຕູ,
ແລະໃຫ້ນາຍເຈາະຫູຂອງລາວດ້ວຍເຫລັກຫມາດ. ແລ້ວລາວຈະຢູ່ຮັບໃຊ້ນາຍຕະຫລອດຊີວິດຂອງລາວ.
[7]ຖ້າຊາຍໃດຂາຍລູກສາວເປັນທາດຍິງ, ນາງຈະບໍ່ໄດ້ເປັນອິສະຣະເຫມືອນທາດຊາຍ.[8]ຖ້ານາງນັ້ນບໍ່ເປັນທີ່ພໍໃຈນາຍ, ຜູ້ຊຶ່ງໄດ້ຮັບນາງໄວ້,
ແລ້ວລາວຕ້ອງຍອມໃຫ້ນາງຖືກຊື້ຄືນ. ແຕ່ຊາຍນັ້ນບໍ່ມີສິດຂາຍນາງນັ້ນໃຫ້ແກ່ຄົນຕ່າງຊາດ. ລາວບໍ່ໄດ້ຮັບສິດເຊັ່ນນີ້,
ເພາະລາວບໍ່ໄດ້ປະຕິບັດຢ່າງສັດຊື່ຕໍ່ນາງ.
[9]ຖ້ານາຍຍົກຍິງນັ້ນໃຫ້ເປັນເມຍຂອງລູກຊາຍຂອງຕົນ, ນາຍຕ້ອງປະຕິບັດກັບນາງເຫມືອນເປັນລູກສາວຂອງຕົນ.
[10]ຖ້າລາວເອົາຍິງອື່ນອີກມາເປັນເມຍ, ລາວຕ້ອງບໍ່ລຸດຄ່າອາຫານ, ເສື້ອຜ້າ, ຫລືສິດທິແຕ່ງງານຂອງນາງ.
[11]ແຕ່ຖ້າລາວບໍ່ໄດ້ເຮັດສາມຢ່າງນີ້ແກ່ນາງ. ແລ້ວນາງນັ້ນຈະໄປກໍໄດ້ໂດຍເປັນອິສະຣະ ບໍ່ຕ້ອງເສຍຄ່າໄຖ່ໃດໆ.
[12]ຜູ້ໃດກໍຕາມຕີຄົນຫນຶ່ງແລ້ວເຂົາກໍຕາຍ, ຜູ້ນັ້ນຈະຕ້ອງຮັບເຖິງແກ່ຄວາມຕາຍແນ່ນອນ.[13]ຖ້າຄົນນັ້ນເຮັດໄປໂດຍບໍ່ໄຕ່ຕອງໄວ້ລ່ວງຫນ້າ,
ແຕ່ດ້ວຍອຸບັດເຫດ, ແລ້ວເຮົາຈະກຳຫນົດທີ່ແຫ່ງຫນຶ່ງໃຫ້ລາວສາມາດຫນີໄປໄດ້.[14]ຖ້າຜູ້ໃດເຈດຕະນາຂ້າເພື່ອນບ້ານ
ແລະວາງແຜນຂ້າຄົນໂດຍເຈດຕະນາ, ແລ້ວເຈົ້າຈົ່ງນຳຕົວລາວ, ແມ່ນວ່າລາວຈະຢູ່ທີ່ແທ່ນບູຊາຂອງພຣະເຈົ້າ, ເພື່ອລົງໂທດເຂົາເຖິງຕາຍ.
[15]ຜູ້ໃດກໍຕາມທີ່ທຸບຕີບິດາ ຫລືມານດາຂອງຕົນ ຈະຖືກລົງໂທດເຖິງຄວາມຕາຍແນ່ນອນ.[16]ຜູ້ໃດກໍຕາມລັກພາຕົວຄົນໄປ ແລະຂາຍເຂົາ
ຫລືພົບວ່າຜູ້ນັ້ນຢູ່ໃນຄວາມຄອບຄອງຂອງເຂົາ, ຜູ້ລັກນັ້ນຈະຕ້ອງຖືກລົງໂທດເຖິງຕາຍຢ່າງແນ່ນອນ.[17]ຜູ້ໃດກໍຕາມທີ່ປ້ອຍດ່າບິດາ
ຫລືມານດາຂອງຕົນ ຜູ້ນັ້ນຕ້ອງຖືກລົງໂທດເຖິງຕາຍຢ່າງແນ່ນອນ.
[18]ຖ້າຜູ້ຊາຍຕໍ່ສູ້ກັນ ແລະຝ່າຍຫນຶ່ງເອົາຫີນຂ້ວາງຫລືຊົກດ້ວຍກຳປັ້ນ, ແລະ ແຕ່ອີກຝ່າຍຫນຶ່ງບໍ່ເຖິງແກ່ຄວາມຕາຍ,
ແຕ່ບາດເຈັບຕ້ອງນອນພັກທີ່ຕຽງຂອງລາວ;[19]ແລ້ວຖ້າລາວຫາຍດີ ແລະ ສາມາດຍ່າງໄດ້ໂດຍໃຊ້ໄມ້ຄ້ອນເທົ້າຂອງລາວ,
ຜູ້ຕີນັ້ນຈະຕ້ອງເສຍຄ່າເສຍເວລາ; ຄ່າຮັກສາພະຍາບານທັງຫມົດຈົນລາວຫາຍດີເປັນປົກກະຕິ.
ແຕ່ຄົນທີ່ເຮັດຮ້າຍນັ້ນຈະບໍ່ມີຄວາມຜິດຖານຂ້າຄົນ.
[20]ຖ້າຜູ້ໃດທຸບຕີທາດຊາຍ ຫລືທາດຍິງຂອງຕົນດ້ວຍໄມ້, ແລະຖ້າທາດນັ້ນຕາຍເນື່ອງຈາກການຕີນັ້ນ,
ແລ້ວຜູ້ນັ້ນຈະຕ້ອງຖືກລົງໂທດຢ່າງແນ່ນອນ.[21]ຢ່າງໃດກໍດີ, ຖ້າທາດນັ້ນມີຊີວິດຕໍ່ໄປພາຍໃນຫນຶ່ງຫລືສອງສອງມື້, ນາຍກໍບໍ່ຕ້ອງຖືກລົງໂທດ,
ເພາະລາວຕ້ອງທໍຣະມານໃຈຈາກສູນເສຍທາດນັ້ນ.
[22]ຖ້າຜູ້ຊາຍຕີກັນ ແລະໄປເຮັດໃຫ້ຍິງຖືພາບາດເຈັບຈົນ ເຮັດໃຫ້ເດັກເກີດກ່ອນກຳຫນົດ ຫລືຫລຸລູກ, ແຕ່ນາງບໍ່ໄດ້ຮັບອັນຕະລາຍ.
ຄົນທີ່ທຳຮ້າຍນາງຈະຕ້ອງຖືກປັບໄຫມຕາມແຕ່ສາມີຂອງຍິງນັ້ນຈະຮຽກຮ້ອງເອົາຈາກລາວ, ແລະ ລາວຕ້ອງຈ່າຍຕາມທີ່ຜູ້ພິພາກສາຕັດສິນ.
[23]ແຕ່ຫາກນາງໄດ້ຮັບບາດເຈັບສາຫັດ, ແລ້ວເຈົ້າຕ້ອງໃຊ້ແທນດ້ວຍຊີວິດ.[24]ຕາແທນຕາ, ແຂ້ວແທນແຂ້ວ, ມືແທນມື, ຕີນແທນຕີນ,
[25]ຮອຍໄຫມ້ແທນຮອຍໄຫມ້, ບາດແຜແທນບາດແຜ, ຫລືຮອຍຊ້ຳແທນຮອຍຊ້ຳ.
[26]ຖ້າຜູ້ໃດຕີທີ່ຕາຂອງທາດຊາຍ ຫລືທາດຍິງແລ້ວເຮັດໃຫ້ຕາບອດໄປ, ແລ້ວລາວຈະຕ້ອງປ່ອຍທາດຜູ້ນັ້ນໃຫ້ເປັນອິສະຣະ
ເພື່ອໃຊ້ແທນດວງຕາຂອງທາດນັ້ນ.[27]ຖ້າຜູ້ໃດເຮັດໃຫ້ແຂ້ວຂອງທາດຊາຍ ຫລື ທາດຍິງຫລຸດອອກໄປ, ລາວຕ້ອງປ່ອຍທາດຜູ້ນັ້ນເປັນອິສະຣະ
ເພື່ອໃຊ້ແທນແຂ້ວ.
[28]ຖ້າງົວຂ້າຊາຍ ຫລືຍິງຄົນຫນຶ່ງເຖິງແກ່ຄວາມຕາຍ, ຈົ່ງເອົາຫີນຄ່ວາງງົວນັ້ນໃຫ້ຕາຍ ແລະຫ້າມກິນຊີ້ນຂອງມັນ; ແຕ່ເຈົ້າຂອງງົວບໍ່ມີໂທດ.
[29]ແຕ່ຖ້າງົວມີນິໄສມັກຊົນຄົນມາກ່ອນ, ແລະມີຜູ້ມາເຕືອນໃຫ້ເຈົ້າຂອງງົວໃຫ້ຮູ້ແລ້ວ, ແຕ່ເຈົ້າຂອງບໍ່ໄດ້ກັກຂັງມັນໄວ້,
ແລະມັນໄດ້ຊົນຄົນຕາຍໄປບໍ່ວ່າຊາຍຫລືຍິງ, ກໍໃຫ້ເອົາຫີນຂ້ວາງງົວນັ້ນເສຍໃຫ້ຕາຍ, ແລະໃຫ້ລົງໂທດເຈົ້າຂອງງົວໃຫ້ເຖິງຕາຍດ້ວຍ.
[30]ຖ້າຈະຮຽກຮ້ອງເອົາຄ່າໄຖ່ຊີວິດຂອງລາວ, ລາວຕັ້ງເສຍຄ່າໄຖ່ຕາມຈຳນວນທີ່ເຂົາຮຽກຮ້ອງໃຫ້ຈ່າຍ.
[31]ຫາກງົວນັ້ນຊົນລູກຊາຍ ຫລືລູກສາວ, ເຈົ້າຂອງງົວຈະຕ້ອງປະຕິບັດຕາມກົດທີ່ຮຽກຮ້ອງໃຫ້ລາວປະຕິບັດ.[32]ຖ້າງົວນັ້ນຊົນທາດຊາຍ
ຫລືທາດຍິງຂອງຜູ້ໃດ, ເຈົ້າຂອງງົວຕ້ອງໃຫ້ເງິນສາມສິບເຊເຂ, ແລະຕ້ອງເອົາຫີນຄ່ວາງງົວນັ້ນໃຫ້ຕາຍ.
[33]ຖ້າຜູ້ໃດເປີດນ້ຳສ້າງ, ຫລືຂຸດນ້ຳສ້າງ ແລະບໍ່ໄດ້ອັດມັນໄວ້, ແລະມີງົວຫລືລາຕົກລົງໄປໃນນ້ຳສ້າງນັ້ນ,
ເຈົ້າຂອງນ້ຳສ້າງຕ້ອງຈ່າຍຄ່າເສຍຫາຍ.[34]ລາວຕ້ອງຈ່າຍແທນຄືນໃຫ້ແກ່ເຈົ້າຂອງສັດ, ແລະສັດທີ່ຕາຍນັ້ນຈະຕົກເປັນຂອງເຈົ້າຂອງນ້ຳສ້າງ.
[35]ຖ້າງົວຂອງຜູ້ໃດທຳຮ້າຍງົວຂອງຜູ້ອື່ນຕາຍ. ແລ້ວເຂົາຕ້ອງຂາຍງົວທີ່ເປັນນັ້ນ ແລະແບ່ງເງິນກັນ, ແລະແບ່ງງົວທີ່ຕາຍນັ້ນໃຫ້ເທົ່າກັນ.
[36]ແຕ່ຖ້າຮູ້ແລ້ວວ່າງົວມີນິດໄສມັກຊົນຄົນອື່ນມາກ່ອນ, ແລະເຈົ້າຂອງບໍ່ໄດ້ກັກຂັງໄວ້, ເຈົ້າຂອງຕ້ອງໃຊ້ງົວແທນຄືນງົວ,
ແລະງົວທີ່ຕາຍກໍຈະຕົກເປັນຂອງເຈົ້າຂອງສັດເອງ.


generated on Tue Jun 17 19:01:42 2025

22
[1]ຖ້າຜູ້ໃດລັກງົວ ຫລືແກະໄປ ແລະ ຂ້າຫລືຂາຍ, ໃຫ້ຜູ້ນັ້ນຕ້ອງໃຊ້ແທນງົວຫ້າໂຕຕໍ່ງົວຫນຶ່ງໂຕ, ແລະ ແກະສີ່ໂຕຕໍ່ແກະຫນຶ່ງໂຕ.
[2]ຖ້າຜູ້ໃດໄດ້ເຫັນຄົນຂີ້ລັກກຳລັງເຂົ້າມາ, ແລະ ຖ້າລາວໄດ້ຕີຄົນຂີ້ລັກນັ້ນຈົນຕາຍ,
ໃນກໍລະນີນັ້ນກໍຈະບໍ່ມີຄວາມຜິດໃນຖານຂ້າຄົນໃນຄະດີຂອງລາວ.[3]ແຕ່ຖ້າຕາເວັນຂຶ້ນແລ້ວກ່ອນທີ່ລາວບຸກລຸກເຂົ້າມາ,
ຄວາມຜິດຖານຂ້າຄົນຈະຕົກແກ່ຜູ້ຂ້າລາວນັ້ນ. ຄົນຂີ້ລັກຕ້ອງໃຊ້ແທນຄືນ, ຖ້າລາວບໍ່ມີອັນໃດຈະໃຊ້ໃຫ້.
ແລ້ວລາວຕ້ອງຂາຍຕົນເອງເພື່ອໃຊ້ແທນສິ່ງທີ່ລາວລັກໄປ.[4]ຖ້າພົບສັດທີ່ລັກໄປນັ້ນຍັງເປັນຢູ່ໃນການຄອບຄອງຂອງລາວ, ບໍ່ວ່າຈະເປັນງົວ, ຫລືລໍ,
ຫລືແກະ, ລາວຕ້ອງຈ່າຍຄືນສອງເທົ່າ.

[5]ຖ້າຜູ້ໃດປ່ອຍຝູງສັດຂອງຕົນໄປກິນຫຍ້າໃນທົ່ງຫຍ້າ ຫລືໃນສວນອະງຸ່ນ ແລະປ່ອຍໃຫ້ສັດຫລົງ,
ແລະເຂົ້າໄປກິນຫຍ້າໃນທົ່ງນາຂອງອີກຄົນຫນຶ່ງ, ລາວຕ້ອງໃຊ້ແທນດ້ວຍພືດຜົນສ່ວນທີ່ດີທີ່ສຸດຈາກທົ່ງນາ ແລະ ຈາກສວນຂອງລາວເອງ.
[6]ຖ້າໄຟລຸກ ແລະ ລາມໄປຕິດພຸ່ມຫນາມຈົນເຖິງກອງເຂົ້າ, ຫລືເຂົ້າທີ່ຍັງບໍ່ໄດ້ກ່ຽວ, ຫລືລາມໄປໃນທົ່ງນາຈົນເສຍຫມົດ,
ຜູ້ທີ່ເປັນຜູ້ຈຸດໄຟຕ້ອງໃຊ້ແທນຄ່າເສຍຫາຍທັງຫມົດ.
[7]ຖ້າຜູ້ໃດຝາກເງິນ ຫລື ສິ່ງຂອງໄວ້ກັບເພື່ອນບ້ານເພື່ອໃຫ້ລາວໃຫ້ດູແລ, ແລະຖ້າສິ່ງຂອງນັ້ນຖືກລັກໄປຈາກເຮືອນຂອງຜູ້ນັ້ນ,
ຖ້າຈັບຄົນຂີ້ລັກໄດ້ ຄົນຂີ້ລັກນັ້ນຕ້ອງໃຊ້ແທນສອງເທົ່າ.[8]ແຕ່ຖ້າຫາກຈັບຄົນຂີ້ລັກບໍ່ໄດ້ ກໍໃຫ້ເຈົ້າຂອງເຮືອນມາພົບກັບຜູ້ພິພາກສາ
ເພື່ອຮັບການພິຈາລະນາແມ່ນລາວເອງ ຫລືບໍ່ທີ່ລັກສົມບັດຂອງເພື່ອນບ້ານ.[9]ໃນຄະດີຮ້ອງຟ້ອງທຸກຢ່າງ, ບໍ່ວ່າຈະເປັນເລື່ອງງົວ, ລໍ, ແກະ,
ເຄື່ອງນຸ່ງຫົ່ມ, ຫລືເລື່ອງສິ່ງຂອງໃດໆທີ່ຫາຍໄປ ຊຶ່ງບາງຄົນອ້າງວ່າ, "ສິ່ງນີ້ເປັນຂອງຂ້ອຍ." ໃຫ້ທັງສອງຝ່າຍນຳກໍລະນີຂອງເລື່ອງນັ້ນ
ໄປພົບຜູ້ພິພາກສາ. ຜູ້ໃດທີ່ຜູ້ພິພາກສາພົບຄວາມຜິດ ຜູ້ນັ້ນຈະຕ້ອງໃຊ້ແທນເປັນສອງເທົ່າແກ່ເພື່ອນບ້ານຂອງລາວ.
[10]ຖ້າຜູ້ໃດຝາກລໍ, ງົວ, ແກະ, ຫລືສັດໃດໆໄວ້ກັບເພື່ອນບ້ານຂອງລາວ, ແລະຖ້າສັດຕາຍ ຫລື ເຈັບຫລືຖືກຕ້ອນເອົາໄປໂດຍບໍ່ມີໃຜເຫັນ.
[11]ຕ້ອງໃຫ້ທັງສອງຄົນນັ້ນສາບານຕໍ່ພຣະຢາເວວ່າ, ຄົນຫນຶ່ງຄົນໃດໄດ້ເອົາຊັບສິນຂອງເພື່ອນບ້ານໄວ້ໃນມືຂອງລາວ ຫລືບໍ່.
ແລ້ວເຈົ້າຂອງນັ້ນຈະຕ້ອງຍອມຮັບ, ຜູ້ຮັບຝາກນັ້ນບໍ່ຕ້ອງຈ່າຍຄ່າຊົດເຊີຍ.[12]ແຕ່ຖ້າສິ່ງຂອງຖືກລັກໄປຈາກລາວ,
ອີກຝ່າຍຫນຶ່ງຕ້ອງຈ່າຍຄ່າຊົດເຊີຍໃຫ້ແກ່ຜູ້ທີ່ເປັນເຈົ້າຂອງ.[13]ຖ້າສັດນັ້ນຖືກຕັດເປັນຕ່ອນໆ, ໃຫ້ອີກຄົນນຳຊາກມາໃຫ້ກວດເບິ່ງເປັນຫລັກຖານ.
ລາວບໍ່ຕ້ອງຈ່າຍຄ່າຊົດເຊີຍສຳລັບສັດທີ່ຖືກຕັດເປັນຕອນໆນັ້ນ.
[14]ຖ້າຜູ້ໃດຢືມສັດຈາກເພື່ອນບ້ານ, ແລະແລ້ວມັນເກີດເຈັບ ຫລືຕາຍໃນລະຫວ່າງທີ່ເຈົ້າຂອງບໍ່ຢູ່, ອີກຄົນຕ້ອງຈ່າຍຄ່າຊົດເຊີຍເຕັມຕາມຈຳນວນ.
[15]ແຕ່ຖ້າເຈົ້າຂອງຢູ່ນຳ, ອີກຄົນບໍ່ຕ້ອງຈ່າຍຄ່າຊົດເຊີຍ; ຖ້າເປັນສັດເຊົ່າ, ໃຫ້ຈ່າຍແຕ່ຄ່າເຊົ່າເທົ່ານັ້ນ.
[16]ຖ້າຜູ້ໃດຫລອກລວງສາວປອດທີ່ຍັງບໍ່ໄດ້ຫມັ້ນຫມາຍ, ແລະຖ້າລາວນອນກັບນາງນັ້ນ. ລາວຕ້ອງຮັບນາງມາເປັນເມຍຂອງລາວ
ໂດຍຈ່າຍເງິນຄ່າສິນສອດຕາມທີ່ຮຽກຮ້ອງ.[17]ຖ້າພໍ່ຂອງນາງບໍ່ຍອມຍົກນາງໃຫ້ລາວຢ່າງເດັດຂາດ,
ລາວກໍຕ້ອງເສຍເງິນເທົ່າສິນສອດຕາມທຳນຽມສູ່ຂໍສາວປອດນັ້ນ.
[18]ພວກເຈົ້າຕ້ອງບໍ່ໃຫ້ນັກເວດມົນມີຊີວິດຢູ່.[19]ຜູ້ໃດຮ່ວມສົມສູ່ກັບສັດຈະຕ້ອງມີໂທດເຖິງຕາຍ.
[20]ຜູ້ໃດກໍຕາມບູຊາແດ່ພະໃດໆນອກຈາກພຣະຢາເວ ຜູ້ນັ້ນຈະຕ້ອງຖືກທຳລາຍຢ່າງຫມົດສິ້ນ.[21]ພວກເຈົ້າຕ້ອງບໍ່ເຮັດຜິດຕໍ່ຄົນຕ່າງດ້າວ
ຫລືຂົ່ມເຫັງເຂົາ. ເພາະພວກເຈົ້າກໍເຄີຍເປັນຄົນຕ່າງດ້າວໃນແຜ່ນດິນອີຢີບ.
[22]ພວກເຈົ້າຕ້ອງບໍ່ຂົ່ມເຫັງຍິງຫມ້າຍ ຫລື ລູກກຳພ້າພໍ່.[23]ຖ້າພວກເຈົ້າຂົ່ມເຫງພວກເຂົາ, ແລະຖ້າພວກເຂົາຮ້ອງຫາເຮົາ,
ເຮົາຈະຟັງຄຳຮ້ອງທຸກຂອງພວກເຂົາຢ່າງແນ່ນອນ.[24]ຄວາມໂກດຮ້າຍຂອງເຮົາຈະລຸກຂຶ້ນ, ແລະເຮົາຈະປະຫານພວກເຈົ້າດ້ວຍດາບ;
ເມຍຂອງພວກເຈົ້າຈະເປັນຫມ້າຍ, ແລະລູກຂອງພວກເຈົ້າຈະກຳພ້າພໍ່.
[25]ຖ້າພວກເຈົ້າໃຫ້ປະຊາຊົນຂອງເຮົາຄົນໃດທີ່ເປັນຄົນຈົນທ່າມກາງພວກເຈົ້າຢືມເງິນໄປ, ພວກເຈົ້າຕ້ອງບໍ່ຖືວ່າຕົນເປັນເຈົ້າຫນີ້
ຫລືຫ້າມເອົາດອກເບ້ຍຈາກລາວ.[26]ຖ້າພວກເຈົ້າຍຶດເສື້ອຄຸມຂອງເພື່ອນບ້ານໄວ້ເປັນຂອງຄ້ຳປະກັນ,
ພວກເຈົ້າຕ້ອງຄືນຂອງນັ້ນໃຫ້ລາວກ່ອນຕາເວັນຕົກດິນ,[27]ເພາະສິ່ງນັ້ນເປັນສິ່ງດຽວສຳລັບຄຸມ; ເສື້ອຜ້ານັ້ນກໍສຳລັບຄຸມຮ່າງກາຍຂອງລາວ.
ລາວຈະໃຊ້ອັນໃດຫົ່ມນອນ? ເມື່ອລາວຮ້ອງທຸກຕໍ່ເຮົາ, ເຮົາຈະຟັງລາວ, ເພາະເຮົາມີໃຈເມດຕາ.
[28]ພວກເຈົ້າຕ້ອງບໍ່ຫມິ່ນປະຫມາດເຮົາ, ພຣະເຈົ້າ, ຫລືສາບແຊ່ງຜູ້ປົກຄອງປະຊາຊົນຂອງພວກເຈົ້າ.
[29]ພວກເຈົ້າຕ້ອງບໍ່ຊັກຊ້າທີ່ຈະຖວາຍເຄື່ອງບູຊາທີ່ຈາກການເກັບກ່ຽວຂອງເຈົ້າ ຫລືຈາກອ່າງຢຽບອະງຸ່ນຂອງພວກເຈົ້າ.
ພວກເຈົ້າຕ້ອງຖວາຍລູກຊາຍກົກຂອງເຈົ້າແກ່ເຮົາ.[30]ພວກເຈົ້າຕ້ອງຖວາຍລູກຫົວປີຂອງງົວ ແລະແກະຂອງເຈົ້າ. ໃຫ້ລູກມັນຢູ່ກັບແມ່ເຈັດມື້,
ແຕ່ພໍເຖິງມື້ທີແປດຕ້ອງເອົາມາຖວາຍແກ່ເຮົາ.[31]ພວກເຈົ້າເປັນປະຊາຊົນທີ່ບໍລິສຸດສຳລັບເຮົາ.
ສະນັ້ນພວກເຈົ້າຕ້ອງບໍ່ກິນຊີ້ນສັດທີ່ຖືກກັດຕາຍໃນທົ່ງນາ. ແຕ່, ພວກເຈົ້າຈົ່ງໂຍນຊາກນັ້ນໃຫ້ຫມາກິນ.

## 23

[1]ພວກເຈົ້າຕ້ອງບໍ່ໃຫ້ການລາຍງານກ່ຽວກັບຄົນໃດຄົນຫນຶ່ງ. ຈົ່ງຢ່າຮ່ວມກັບຄົນຊົ່ວໂດຍເປັນພະຍານບໍ່ຈິງ.
[2]ພວກເຈົ້າຕ້ອງບໍ່ເຮັດຊົ່ວຕາມຢ່າງຄົນສ່ວນຫລາຍ, ຫລືບໍ່ເປັນພະຍານໂດຍລຳອຽງເຂົ້າຂ້າງຄົນສ່ວນຫລາຍ
ເພາະຈະເຮັດໃຫ້ເສຍຄວາມຍຸຕິທັມໄປ.[3]ພວກເຈົ້າຕ້ອງບໍ່ຕ້ອງເຂົ້າຂ້າງຄົນຈົນໃນຄະດີຂອງລາວ.

[4]ຖ້າພວກເຈົ້າພົບງົວ ຫລືລໍຂອງສັດຕຣູຫລົງມາ, ພວກເຈົ້າຕ້ອງພາໄປສົ່ງຄືນລາວ.[5]ຖ້າພວກເຈົ້າເຫັນລໍຂອງຜູ້ທີ່ກຽດຊັງເຈົ້າລົ້ມລົງ
ເພາະຂົນເຄື່ອງຫນັກ, ພວກເຈົ້າຕ້ອງບໍ່ເມີນເສີຍຄົນນັ້ນ. ພວກເຈົ້າຈົ່ງຊ່ວຍລາວກັບລໍຂອງລາວ.
[6]ພວກເຈົ້າຕ້ອງບໍ່ບິດເບືອນຄວາມຍຸຕິທັມ ທີ່ຄົນຈົນຄວນໄດ້ຮັບໃນຄະດີຂອງລາວ.[7]ຢ່າຮ່ວມກັບຄົນອື່ນໃນການໃສ່ຮ້າຍປ້າຍສີ, ແລະ
ຢ່າປະຫານຄົນບໍຣິສຸດ ຫລື ຄົນຊອບທັມ, ເພາະເຮົາຈະບໍ່ປ່ອຍຄົນເຮັດຊົ່ວຢ່າງນັ້ນ.[8]ຫ້າມຮັບສິນບົນ, ເພາະສິນບົນເຮັດໃຫ້ຄົນຕາດີ
ກາຍເປັນຄົນຕາບອດ, ແລະເຮັດໃຫ້ຖ້ອຍຄຳຂອງຄົນສັດຊື່ບິດເບືອນໄປ.[9]ພວກເຈົ້າຕ້ອງບໍ່ຂົ່ມເຫັງຄົນຕ່າງດ້າວ,
ເພາະພວກເຈົ້າຮູ້ຈັກຊີວິດຄົນຕ່າງດ້າວແລ້ວ, ເມື່ອພວກເຈົ້າກໍເຄີຍເປັນຄົນຕ່າງດ້າວໃນແຜ່ນດິນອີຢິບມາກ່ອນ.
[10]ຕະຫລອດຫົກປີພວກເຈົ້າຈະຫວ່ານພືດຂອງພວກເຈົ້າ ແລະເກັບກ່ຽວຜົນຂອງມັນ.[11]ແຕ່ປີທີເຈັດນັ້ນ ພວກເຈົ້າຈະງົດໄຖ
ແລະປ່ອຍທົ່ງນາໃຫ້ວ່າງໄວ້, ເພື່ອໃຫ້ປະຊາຊົນທີ່ຍາກຈົນທ່າມກາງພວກເຈົ້າໄດ້ເກັບກິນ, ສ່ວນທີ່ພວກເຂົາເຫລືອໄວ້ນັ້ນກໍໃຫ້ສັດປ່າກິນ.
ພວກເຈົ້າຈະຕ້ອງເຮັດເຊັ່ນດຽວກັນກັບສວນອະງຸ່ນ ແລະສວນຫມາກກອກເທດດ້ວຍ.
[12]ໃນລະຫວ່າງຫົກວັນພວກເຈົ້າຈະເຮັດວຽກຂອງພວກເຈົ້າ, ແຕ່ໃນວັນທີເຈັດນັ້ນ ພວກເຈົ້າຈົ່ງຢຸດພັກ. ຈົ່ງເຮັດເຊັ່ນນີ້ເພື່ອງົວ
ແລະລໍຂອງເຈົ້າຈະໄດ້ພັກ, ແລະລູກຊາຍທາດຍິງຂອງພວກເຈົ້າ ກັບຄົນຕ່າງດ້າວຈະໄດ້ພັກຜ່ອນ ແລະ ໃຫ້ສົດຊື່ນດ້ວຍ.
[13]ຈົ່ງຕັ້ງໃຈປະຕິບັດທຸກສິ່ງທີ່ເຮົາສັ່ງພວກເຈົ້ານັ້ນ. ຢ່າອອກຊື່ພະອື່ນໆ, ຫລືຢ່າກ່າວຊື່ຂອງພະເຫລົ່ານັ້ນ ໃຫ້ໄດ້ຍິນຈາກປາກຂອງພວກເຈົ້າ.
[14]ພວກເຈົ້າຕ້ອງເດີນທາງໄປສະຫລອງເທສະການຖວາຍໃຫ້ເຮົາປີລະສາມເທື່ອ.[15]ພວກເຈົ້າຕ້ອງຖືເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ.
ຕາມທີ່ເຮົາສັ່ງພວກເຈົ້າໄວ້, ພວກເຈົ້າຈະກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເປັນເວລາເຈັດມື້. ເພາະໃນເວລານັ້ນ
ພວກເຈົ້າຈະເຂົ້າມາປາກົດຕົວຕໍ່ຫນ້າເຮົາໃນເດືອນຂອງອາບີບ, ຊຶ່ງແມ່ນໄດ້ກຳຫນົດໄວ້. ໃນເດືອນນີ້ພວກເຈົ້າໄດ້ອອກມາຈາກອີຢິບ.
ແຕ່ພວກເຈົ້າຕ້ອງບໍ່ມາເຝົ້າເຮົາມືເປົ່າ.
[16]ພວກເຈົ້າຕ້ອງຖືເທສະການລ້ຽງສະຫລອງການເກັບກ່ຽວ, ພືດຜົນທຳອິດທີ່ເກີດຈາກແຮງງານຂອງພວກເຈົ້າ
ເມື່ອພວກເຂົ້າຫວ່ານພືດລົງໃນນາ. ພວກເຈົ້າຕ້ອງຖືເທສະການສະຫລອງພືດຜົນປາຍປີ, ເມື່ອພວກເຈົ້າເກັບພືດຜົນຈາກທົ່ງນາແລ້ວ.
[17]ຊາຍທຸກຄົນຂອງພວກເຈົ້າຕ້ອງເຂົ້າມາເຝົ້າພຣະຢາເວ ພຣະຜູ້ເປັນເຈົ້າປີລະສາມເທື່ອ.
[18]ພວກເຈົ້າຕ້ອງບໍ່ຍອມຖວາຍເລືອດຈາກເຄື່ອງບູຊາທີ່ເຮັດຖວາຍໃຫ້ແກ່ເຮົາ ພ້ອມກັບເຂົ້າຫນົມໃສ່ເຊື້ອແປ້ງ.
ໄຂມັນຈາກເຄື່ອງຖວາຍບູຊາໃນເທສະການລ້ຽງຂອງເຮົາ ຈະຕ້ອງບໍ່ເຫລືອຄ້າງຄືນຈົນເຖິງຕອນເຊົ້າ.
[19]ພວກເຈົ້າຕ້ອງນຳສ່ວນທີ່ດີທີ່ສຸດຂອງພືດຜົນທຳອິດຈາກດິນຂອງພວກເຈົ້າມາຍັງພຣະວິຫານຂອງເຮົາ,
ພຣະວິຫານຂອງພຣະຢາເວພຣະເຈົ້າຂອງພວກເຈົ້າ. ພວກເຈົ້າຕ້ອງບໍ່ຕົ້ມລູກແບ້ດ້ວຍນົມຂອງແມ່ຂອງມັນ.
[20]ເຮົາຈະໃຊ້ເທວະດາຂອງເຮົານຳຫນ້າພວກເຈົ້າເພື່ອຄູ້ມຄອງພວກເຈົ້າຕາມທາງ, ແລະນຳພວກເຈົ້າໄປເຖິງບ່ອນທີ່ເຮົາໄດ້ຕຽມໄວ້.
[21]ຈົ່ງເອົາໃຈໃສ່ ແລະເຊື່ອຟັງລາວ. ເພາະລາວຈະບໍ່ຍົກໂທດ, ໃນຄວາມຜິດຂອງພວກເຈົ້າເລີຍ, ດ້ວຍລາວໄດ້ເຮັດໃນນາມຂອງເຮົາ.
[22]ຖ້າພວກເຈົ້າເຊື່ອຟັງສຽງຂອງລາວແທ້ໆ ແລະເຮັດຕາມທຸກໆສິ່ງທີ່ເຮົາສັ່ງໄວ້ກັບພວກເຈົ້າ, ແລ້ວເຮົາຈະເປັນສັດຕູຕໍ່ພວກສັດຕຣູຂອງພວກເຈົ້າ
ແລະເປັນຄູ່ຕໍ່ສູ້ຜູ້ທີ່ເປັນຄູ່ຕໍ່ສູ້ຂອງພວກເຈົ້າ.
[23]ເທວະດາຂອງເຮົາຈະໄປຂ້າງຫນ້າພວກເຈົ້າ ແລະ ນຳພວກເຈົ້າໄປເຖິງຊາວອະໂມຣິດ, ຊາວຮິດຕີ, ຊາວເປຣິຊີ, ຊາວການາອານ, ຊາວຮີວີ,
ແລະຊາວເຢບຸດ. ເຮົາຈະທຳລາຍພວກເຂົາເຫລົ່ານັ້ນເສຍ.[24]ພວກເຈົ້າຕ້ອງບໍ່ຂາບໄຫວ້, ນະມັດສະການບັນດາພະຂອງພວກເຂົາ,
ຫລືເຮັດຕາມແບບຢ່າງຂອງພວກເຂົາ. ແຕ່ພວກເຈົ້າຕ້ອງທຳລາຍຮູບເຄົາຣົບຂອງພວກເຂົາ ແລະທຸບເສົາສັກສິດໃຫ້ແຫລກລະອຽດ.
[25]ພວກເຈົ້າຕ້ອງນະມັດສະການພຣະຢາເວພຣະເຈົ້າຂອງພວກເຈົ້າ, ແລະພຣະອົງຈະອວຍພອນແກ່ອາຫານ ແລະນ້ຳຂອງພວກເຈົ້າ.
ເຮົາຈະເອົາຄວາມເຈັບປ່ວຍອອກໄປຈາກທ່າມກາງພວກເຈົ້າ.
[26]ຈະບໍ່ມີຜູ້ຍິງເປັນຫມັນ ຫລື ຫລຸລູກໃນດິນແດນຂອງພວກເຈົ້າ. ເຮົາຈະໃຫ້ພວກເຈົ້າມີອາຍຸຍືນ.[27]ເຮົາຈະສົ່ງຄວາມຢ້ານໃນຕົວເຮົາ
ຕໍ່ຄົນເຫລົ່ານັ້ນເຂົ້າໄປໃນແຜ່ນດິນຂອງໃຜກໍຕາມທີ່ຢູ່ຕໍ່ຫນ້າພວກເຈົ້າ. ເຮົາຈະປະຫານຊາວເມືອງທັງຫມົດທີ່ພວກເຈົ້າໄປຜະເຊີນຫນ້ານັ້ນ.
ເຮົາຈະເຮັດໃຫ້ສັດຕຣູທັງຫມົດຂອງພວກເຈົ້າຫັນຫລັງຫນີພວກເຈົ້າດ້ວຍຄວາມຢ້ານ.[28]ເຮົາຈະສົ່ງຝູງແຕນຍັກນຳຫນ້າພວກເຈົ້າ
ເພື່ອຂັບໄລ່ຊາວຮີວີ, ຊາວການາອານ, ແລະຊາວຮິດຕີ ໄປໃຫ້ພົ້ນຫນ້າພວກເຈົ້າ.[29]ເຮົາຈະບໍ່ໄລ່ພວກເຂົາໄປໃຫ້ພົ້ນຫນ້າພວກເຈົ້າໃນປີດຽວ,
ຫລືແຜ່ນດິນຈະຮົກຮ້າງໃຫ້, ແລະສັດປ່າຈະຫລາຍເກີນໄປສຳລັບພວກເຈົ້າ.
[30]ແຕ່ເຮົາຈະຄ່ອຍໆ, ໄລ່ພວກເຂົາໄປໃຫ້ພົ້ນຫນ້າພວກເຈົ້າ ຈົນພວກເຈົ້າທະວີຈຳນວນຫລາຍ ແລະຄອບຄອງດິນແດນນັ້ນເປັນກຳມະສິດ.
[31]ເຮົາຈະກຳຫນົດເຂດແດນຂອງພວກເຈົ້າໄວ້ຕັ້ງແຕ່ທະເລຕົ້ນກົກ ເຖິງທະເລຂອງຄົນຟີລິດຕີນ, ແລະຕັ້ງແຕ່ຖິ່ນແຫ້ງແລ້ງກັນດານ
ຈົນເຖິງແມ່ນ້ຳເອຟາຣັດ. ເຮົາຈະໃຫ້ຊັຍຊະນະແກ່ພວກເຈົ້າເຫນືອຜູ້ອາໄສໃນແຜ່ນດິນນັ້ນ. ພວກເຈົ້າຈະຂັບໄລ່ອອກໄປໃຫ້ພົ້ນຫນ້າພວກເຈົ້າ.
[32]ພວກເຈົ້າຕ້ອງບໍ່ເຮັດພັນທະສັນຍາກັບພວກເຂົາ ຫລືກັບບັນດາພະຂອງພວກເຂົາ.[33]ພວກເຂົາຕ້ອງບໍ່ອາໄສໃນດິນແດນຂອງພວກເຈົ້າ,
ຫລືພວກເຂົາຈະຊັກຈູງພວກເຈົ້າໃຫ້ເຮັດບາບຕໍ່ສູ້ເຮົາ. ຖ້າພວກເຈົ້ານະມັດສະການພະຂອງພວກເຂົາ,
ການເຮັດເຊັ່ນນີ້ຈະເປັນບ່ວງແຮ້ວດັກຈັບພວກເຈົ້າ.'"

 generated on Tue Jun 17 19:01:42 2025

24 [1]ແລ້ວພຣະຢາເວກ່າວກັບໂມເຊວ່າ, "ຈົ່ງຂຶ້ນມາເຝົ້າເຮົາ—ເຈົ້າ, ອາໂຣນ, ນາດາບ, ອາບີຮູ ແລະ
ພວກຜູ້ອາວຸໂສຂອງອິສະຣາເອນເຈັດສິບຄົນ, ແລະ ນະມັດສະການເຮົາຢູ່ໄກໆ. [2]ໂມເຊຜູ້ດຽວໃຫ້ເຂົ້າມາໃກ້ເຮົາ.
ສ່ວນຄົນອື່ນຕ້ອງບໍ່ມາໃກ້ ແລະຕ້ອງບໍ່ໃຫ້ປະຊາຊົນຂຶ້ນມາກັບເຂົາ."

[3]ໂມເຊຈຶ່ງໄປ ແລະບອກໃຫ້ປະຊາຊົນທັງຫມົດຮູ້ວ່າ ຖ້ອຍຄຳ ແລະຄຳສັ່ງທັງສິ້ນຂອງພຣະຢາເວ.
ປະຊາຊົນທັງຫມົດກໍຕອບເປັນສຽງດຽວກັນວ່າ,
"ພວກເຮົາຈະເຮັດຕາມຖ້ອຍຄຳຊຶ່ງພຣະຢາເວໄດ້ກ່າວໄວ້." [4]ແລ້ວໂມເຊໄດ້ຂຽນທຸກໆຖ້ອຍຄຳຂອງພຣະຢາເວໄດ້ກ່າວໄວ້ນັ້ນ. ໃນຕອນເຊົ້າມືດ,
ໂມເຊໄດ້ສ້າງແທ່ນບູຊາຂຶ້ນທີ່ເທິງພູ ແລະຕັ້ງເສົາຫີນຂຶ້ນສິບສອງຕົ້ນ, ເພື່ອວ່າຫີນເຫລົ່ານັ້ນຈະແທນຈຳນວນສິບສອງເຜົ່າຂອງອິສະຣາເອນ.
[5]ລາວສົ່ງພວກຊາຍຫນຸ່ມບາງຄົນຂອງຊາວອິສະຣາເອນ ຖວາຍເຄື່ອງເຜົາບູຊາ ແລະຖວາຍເຄື່ອງບູຊາເພື່ອຄວາມສາມັກຄີທັມ
ດ້ວຍງົວແດ່ພຣະຢາເວ. [6]ໂມເຊເອົາເລືອດງົວມາເຄິ່ງຫນຶ່ງ ແລະໃສ່ໄວ້ໃນຊາມຫລາຍຫນ່ວຍ; ລາວໄດ້ພົມເລືອດເຄິ່ງນັ້ນທີ່ແທ່ນບູຊາ.
[7]ລາວໄດ້ເອົາຫນັງສືພັນທະສັນຍາມາ ແລະອ່ານໃຫ້ປະຊາຊົນຟັງດ້ວຍສຽງດັງ. ພວກເຂົາກ່າວວ່າ,
"ພວກເຮົາຈະເຮັດຕາມທຸກຖ້ອຍຄຳຂອງພຣະຢາເວທີ່ໄດ້ກ່າວອອກນັ້ນ. ພວກເຮົາຈະເຊື່ອຟັງ. [8]ແລ້ວໂມເຊກໍໄດ້ເອົາເລືອດ
ແລະປະພົມປະຊາຊົນ. ລາວໄດ້ກ່າວວ່າ, "ນີ້ເປັນເລືອດແຫ່ງພັນທະສັນຍາ ຊຶ່ງພຣະຢາເວໄດ້ເຮັດກັບພວກທ່ານພວກເຈົ້າໂດຍການໃຫ້ສັນຍານີ້
ແກ່ພວກເຈົ້າດ້ວຍຖ້ອຍຄຳທັງຫມົດເຫລົ່ານີ້."
[9]ແລ້ວໂມເຊ, ອາໂຣນ, ນາດາບ, ອາບີຮູ ແລະພວກຜູ້ອາວຸໂສຂອງອິສະຣາເອນເຈັດສິບຄົນກໍຂຶ້ນໄປເທິງພູ.
[10]ພວກເຂົາເຫັນພຣະເຈົ້າຂອງອິສະຣາເອນ. ພື້ນທີ່ຮອງຕີນເປັນເຫມືອນທາງຍ່າງທີ່ເຮັດຈາກເບິ່ງຄືແກ້ວໄພທູນ, ສຸກໃສເຫມືອນທ້ອງຟ້າເອງເລີຍ.
[11]ພຣະເຈົ້າບໍ່ໄດ້ລົງໂທດ ເພາະຄວາມໂກດຕໍ່ບັນດາຜູ້ນຳຂອງອິສະຣາເອນ. ພວກເຂົາໄດ້ເຫັນພຣະເຈົ້າ, ແລະພວກເຂົາກິນ ແລະດື່ມ.
[12]ພຣະຢາເວໄດ້ກ່າວກັບໂມເຊວ່າ, "ຈົ່ງຂຶ້ນມາຫາເຮົາເທິງພູ ແລະຄອຍຢູ່ທີ່ນັ້ນ. ເຮົາຈະໃຫ້ແຜ່ນຫີນ ແລະກົດຫມາຍ ແລະພຣະບັນຍັດ
ຊຶ່ງເຮົາໄດ້ຈາລຶກໄວ້, ເພື່ອເຈົ້າຈະໄດ້ສອນພວກເຂົາ." [13]ດັ່ງນັ້ນໂມເຊຈຶ່ງໄດ້ອອກໄປພ້ອມກັບໂຢຊວຍຜູ້ຊ່ວຍຂອງລາວ ແລະ
ຂຶ້ນໄປເທິງພູຂອງພຣະເຈົ້າ.
[14]ໂມເຊໄດ້ກ່າວກັບບັນດາຜູ້ອາວຸໂສວ່າ, "ຈົ່ງຢູ່ທີ່ນີ້ ແລະຄອຍຖ້າຈົນກວ່າພວກເຮົາຈະກັບມາຫາພວກທ່ານ. ອາໂຣນ ແລະ ຮູເຣ
ກໍຢູ່ກັບພວກເຈົ້າ. ຖ້າໃຜມີຄະດີຫຍັງ, ກໍຈົ່ງໄປຫາພວກເຂົາເຖີ້ນ." [15]ດັ່ງນັ້ນໂມເຊຈຶ່ງຂຶ້ນເທິງພູ, ແລະ ເມກກໍປົກຄຸມລາວໄວ້.
[16]ສະຫງ່າຣາສີຂອງພຣະຢາເວຢູ່ເທິງພູຊີນາຍ, ແລະ ເມກນັ້ນກໍປົກຄຸມພູຢູ່ຫົກມື້. ໃນມື້ທີເຈັດພຣະອົງຊົງເອີ້ນໂມເຊຈາກເມກ.
[17]ພຣະລັກສະນະແຫ່ງສະຫງ່າຣາສີຂອງພຣະຢາເວ ເຫມືອນແປວໄຟທີ່ໄຫມ້ຢູ່ເທິງຈອມພູ ໃນສາຍຕາຂອງຊາວອິສະຣາເອນ.
[18]ໂມເຊເຂົ້າໄປໃນເມກນັ້ນ ແລະຂຶ້ນໄປເທິງພູ. ລາວຢູ່ເທິງພູນັ້ນສີ່ສິບມື້ ແລະ ສີ່ສິບຄືນ.

# 25

[1]ພຣະຢາເວກ່າວກັບໂມເຊວ່າ, [2]"ຈົ່ງບອກຊາວອິສະຣາເອນໃຫ້ນຳເຄື່ອງຖວາຍມາໃຫ້ເຮົາຈາກທຸກຄົນຜູ້ທີ່ມີແຮງຈູງໃຈເຮັດດ້ວຍຄວາມເຕັມໃຈ.
ເຈົ້າຕ້ອງຮັບຂອງທີ່ທຸກຄົນນຳມາຖວາຍໃຫ້ເຮົາ.

[3]ສິ່ງເຫລົ່ານີ້ເປັນເຄື່ອງຖວາຍທີ່ເຈົ້າຕ້ອງຮັບຈາກພວກເຂົາ: ຄຳ, ເງິນ, ແລະທອງແດງ; [4]ດ້າຍສີຟ້າ, ສີມ່ວງ, ແລະຜ້າເລນິນເນື້ອລະອຽດ;
ແລະຂົນແບ້; [5]ແລະຫນັງງົວທະເລ; ໄມ້ກະຖິນເທດ; [6]ນ້ຳມັນໄຕ້ຕະກຽງໃນສະຖານນະມັດສະການ; ເຄື່ອງເທດສຳລັບນ້ຳມັນເພື່ອໃຊ້ໃນການເຈີມ
ແລະສຳລັບເຄື່ອງຫອມ; [7]ພອຍສີນ້ຳເຂົ້າ ແລະພອຍອື່ນໆສຳລັບຝັງໃນເອໂຟດແລະແຜ່ນຮອງເອິກ.
[8]ແລ້ວໃຫ້ພວກເຂົາສ້າງສະຖານນະມັດສະການໃຫ້ເຮົາ ເພື່ອວ່າເຮົາຈະຢູ່ທ່າມກາງພວກເຂົາ.
[9]ເຈົ້າຕ້ອງເຮັດມັນໃຫ້ຕົງຕາມແບບທີ່ເຮົາຈະສຳແດງແກ່ເຈົ້າສຳລັບຫໍເຕັນ ແລະ ອຸປະກອນທຸກຢ່າງ.
[10]ພວກເຂົາຈະຕ້ອງເຮັດຫີບດ້ວຍໄມ້ກະຖິນເທດ. ຂະຫນາດຍາວສອງສອກເຄິ່ງ; ກວ້າງຫນຶ່ງສອກເຄິ່ງ ແລະ ສູງຫນຶ່ງສອກເຄິ່ງ;
[11]ເຈົ້າຕ້ອງຫຸ້ມທັງຂ້າງໃນ ແລະຂ້າງນອກດ້ວຍຄຳບໍຣິສຸດ, ແລະເຈົ້າຕ້ອງເຮັດເປັນຂອບອ້ອມຮອບນອກດ້ວຍຄຳໂດຍຮອບດ້ານເທິງ.
[12]ເຈົ້າຕ້ອງຫລໍ່ຫູຈາກທອງຄຳ, ແລະຕິດໄວ້ທີ່ງຂາຫີບທັງສີ່ດ້ານ, ອີກສອງໂດຍສອງຫູຢູ່ທາງດ້ານຫນຶ່ງ, ອີກສອງຫູຢູ່ທາງດ້ານຫນຶ່ງ.
[13]ເຈົ້າຕ້ອງເຮັດໄມ້ຄານຫາມສອງອັນຈາກໄມ້ກະຖິນເທດ ແລະຫຸ້ມດ້ວຍທອງຄຳ. [14]ເຈົ້າຕ້ອງສອດຄານຫາມໃສ່ຫູທັງສອງດ້ານ,
ເພື່ອໃຊ້ສຳລັບຫາມຫີບນັ້ນ.
[15]ຄານນັ້ນຈະຕ້ອງສອດຢູ່ໃນຫູຂອງຫີບ; ພວກເຂົາຕ້ອງບໍ່ເອົາຄານນັ້ນອອກຈາກຫູ.
[16]ເຈົ້າຕ້ອງໃສ່ສິ່ງທີ່ເຮົາຈະໃຫ້ແກ່ເຈົ້າໄວ້ໃນຫີບພັນທະສັນຍາຂອງຂໍ້ຄຳສັ່ງ. [17]ພວກເຈົ້າຕ້ອງເຮັດຝາຫີບໄຖ່ບາບ ຈາກທອງຄຳບໍຣິສຸດ.
ຂະຫນາດຍາວສອງສອກເຄິ່ງ, ແລະກວ້າງຫນຶ່ງສອງເຄິ່ງ. [18]ເຈົ້າຕ້ອງເຮັດຮູບເຄຣູບສອງອົງດ້ວຍທອງຄຳຕີຂຶ້ນຮູບດ້ວຍຄ້ອນ
ທີ່ປາຍທັງສອງດ້ານຂອງຝາຫີບໄຖ່ບາບ.
[19]ເຄຣູບທີ່ຫນຶ່ງໄວ້ອີກດ້ານຫນຶ່ງຂອງຝາຫີບໄຖ່ບາບ, ແລະອີກອົງຫນຶ່ງໄວ້ບ່ອນອີກດ້ານຫນຶ່ງ ທັງສອງອົງນີ້ຕ້ອງຕີຂຶ້ນຮູບ
ເປັນເນື້ອດຽວກັນກັບຝາຫີບໄຖ່ບາບ. [20]ເຄຣູບຕ້ອງກາງປີກອອກ ແລະເຮັດໃຫ້ເກີດເງົາປີກຄຸມເທິງຝາກັບພວກເຂົາ. ຝາຫີບໄຖ່ບາບ
ເຄຣູບຕ້ອງຫັນຫນ້າເຂົ້າຫາກັນ ແລະເບິ່ງມາຍັງທາງກາງຝາຫີບໄຖ່ບາບ. [21]ເຈົ້າຕ້ອງວາງຝາຫີບໄຖ່ບາບນີ້ໄວ້ເທິງຫີບພັນທະສັນຍາ,
ແລະເຈົ້າຕ້ອງໃສ່ສິ່ງຊຶ່ງເຮົາຈະໃຫ້ເຈົ້າໄວ້ໃນຫີບພັນທະສັນຍາແຫ່ງຄຳສັ່ງ.
[22]ເຮົາຈະຢູ່ໃຫ້ເຈົ້າເຂົ້າເຝົ້າ ແລະຈະສົນທະນາກັບເຈົ້າຈາກພຣະທີ່ນັ່ງກະຣຸນາລະຫວ່າງກາງເຄຣຸບທັງສອງ. ຊຶ່ງຕັ້ງຢູ່ເທິງຫີບພຣະບັນຍັດ
ເຮົາຈະສົນທະນາກັບເຈົ້າທຸກເລື່ອງ ຊຶ່ງເຮົາຈະສັ່ງເຈົ້າໃຫ້ປະກາດແກ່ຊົນຊາດ ອິສຣາເອນ.
[23]ເຈົ້າຕ້ອງເຮັດໂຕະຫນ່ວຍຫນຶ່ງດ້ວຍໄມ້ກະຖິນເທດ. ຄວາມຍາວຈະຕ້ອງເປັນສອງສອກ; ຄວາມກວ້າງຂອງມັນຈະຕ້ອງເປັນຫນຶ່ງສອກ
ແລະຄວາມສູງຂອງມັນຈະເປັນຫນຶ່ງສອກເຄິ່ງ. [24]ເຈົ້າຕ້ອງຫຸ້ມດ້ວຍທອງຄຳບໍຣິສຸດ
ແລະໃຊ້ຄຳເຮັດຂອບອ້ອມຮອບນອກຫຸ້ມດ້ວຍທອງຄຳຢູ່ເທິງດ້ວຍ.
[25]ເຈົ້າຕ້ອງເຮັດແຜ່ນຂອງໂຄງຮອບໂຕະກວ້າງຫນຶ່ງຝາມື, ອ້ອມຮອບໂຄງໂຕະດ້ວຍທອງຄຳ. [26]ເຈົ້າຕ້ອງເຮັດຫູທອງທຳສີ່ຫູ ແລະຕິດໄວ້ທີ່ສີ່ມູມ,
ບ່ອນທີ່ຂາໂຕະທັງສີ່ຂາຢູ່ນັ້ນ. [27]ບັນດາຫູຕ້ອງຕິດກັບໂຄງເພື່ອເປັນຮູສຳລັບສອດຄານຫາມໂຕະນັ້ນ.
[28]ເຈົ້າຕ້ອງເຮັດຄານຈາກໄມ້ກະຖິນເທດ ແລະຫຸ້ມດ້ວຍຄຳເພື່ອໃຫ້ພວກເຂົາໃຊ້ຫາມໂຕະ. [29]ເຈົ້າຕ້ອງເຮັດຈານ, ບ່ວງ, ໂຖໃຫຍ່,
ແລະຖ້ວຍຕ່າງໆ ເພື່ອໃຊ້ເທຢັ້ນເຄື່ອງດື່ມບູຊາ. ເຈົ້າຈົ່ງເຮັດດ້ວຍທອງຄຳບໍຣິສຸດ.
[30]ເຈົ້າຕ້ອງວາງເຂົ້າຈີ່ຕໍ່ຫນ້າເທິງໂຕະນີ້ຕໍ່ຫນ້າເຮົາຕະຫລອດເວລາ.
[31]ເຈົ້າຕ້ອງເຮັດຄັນຕະກຽງອັນຫນຶ່ງຈາກທອງຄຳບໍຣິສຸດ ທີ່ຂຶ້ນຮູບດ້ວຍຄ້ອນ. ທັງຖານ ແລະລຳຕົວຂອງຄັນຕະກຽງ. ພວກໂຕດອກ, ຖານດອກ,
ແລະພວກກີບດອກທັງຫມົດຕ້ອງຂຶ້ນເປັນເນື້ອດຽວກັນ. [32]ໃຫ້ກິ່ງຫົກກິ່ງແຍກອອກຈາກຄັນຕະກຽງ—ຂ້າງລະສາມກິ່ງ,
ແລະສາມກິ່ງຂອງຄັນຕະກຽງ ຈະຕ້ອງຍື່ນອອກມາຈາກອີກຟາກຫນຶ່ງ, ແລະສາມກິ່ງຂອງຄັນຕະກຽງຕ້ອງຍື່ນອອກໄປອີກດ້ານອື່ນ.
[33]ກິ່ງທຳອິດຕ້ອງມີສາມດອກເຮັດຄ້າຍຄືດອກຫມາກບົກ, ຈູມມີຖານດອກ ແລະກີບດອກ, ແລະ
ອີກກິ່ງຫນຶ່ງມີສາມດອກເຮັດຄ້າຍຄືດອກຫມາກບົກຈູມມີຖານດອກ ແລະກີບດອກ.
ຈະຕ້ອງເຫມືອນກັນທັງຫົກກິ່ງທີ່ຍື່ນອອກມາຈາກລຳຄັນຕະກຽງ. [34]ເທິງລຳຄັນຕະກຽງທາງກາງ,
ຈະຕ້ອງມີສີ່ຈອກທີ່ເຮັດເປັນເຫມືອນຮູບດອກຫມາກບົກຈູມ, ຮອງດ້ວຍຖານດອກແລະກີບດອກຢ່າງລະສີ່ດອກ.
[35]ໃຫ້ເຮັດດອກຕູມດອກຫນຶ່ງ ຮອງຮັບກິ່ງຄູ່ທຳອິດ—ອີກດອກຫນຶ່ງຮອງຮັບຂະຫນານຄູ່ທີ່ສອງ—ໃຫ້ເປັນເນື້ອດຽວກັນດ້ວຍ.
ໃນທຳນອງດຽວກັນອີກດອກຫນຶ່ງຮອງຮັບກິ່ງຂະຫນານຄູ່ທີ່ສາມເຮັດຂຶ້ນເປັນເນື້ອດຽວກັນ.
ຈະຕ້ອງເຫມືອນກັນສຳຫລັບຫົກກິ່ງທີ່ຍື່ນອອກມາຈາກຄັນຕະກຽງ. [36]ຖານດອກແລະກິ່ງຕ່າງໆຈະຕ້ອງເປັນເນື້ອດຽວກັນ,
ໃຫ້ຕີຂຶ້ນຮູບດ້ວຍຄ້ອນຈາກຄຳບໍຣິສຸດແຜ່ນດຽວກັນ.
[37]ເຈົ້າຕ້ອງເຮັດຄັນຕະກຽງ ແລະຕະກຽງເຈັດຫນ່ວຍ, ແລະຈັດວາງຕະກຽງເພື່ອໃຫ້ຄວາມສະຫວ່າງຈາກຕະກຽງ. [38]ມີດຕັດໄສ້ຕະກຽງ
ແລະຖາດຮອງຕ້ອງເຮັດດ້ວຍທອງຄຳບໍຣິສຸດ. [39]ໃຊ້ທອງຄຳບໍຣິສຸດຫນຶ່ງຕະລັນເຮັດຄັນຕະກຽງ ແລະເຄື່ອງປະກອບທັງຫມົດ.
[40]ຕ້ອງຫມັ້ນໃຈວ່າເຮັດຕາມແບບທີ່ເຮົາໄດ້ສຳແດງແກ່ເຈົ້າເທິງພູນີ້.

# 26

1ເຈົ້າຕ້ອງສ້າງຫໍເຕັນດ້ວຍຜ້າກັ້ງສິບຜືນ ທີ່ເຮັດດ້ວຍຜ້າປ່ານເນື້ອດີ ແລະຂົນແກະຍ້ອມສີຟ້າ, ສີມ່ວງ, ແລະສີແດງເຂັ້ມເປັນເປັນຮູບເຄຣູບ.
ນີ້ຈະເປັນງານຂອງຊ່າງຝີມືທີ່ຊຳນານຫລາຍ.2ຄວາມຍາວຂອງຜ້າກັ້ງແຕ່ລະຜືນຕ້ອງຍາວຊາວແປດສອກ, ກວ້າງສີ່ສອກ.
ຜ້າກັ້ງທຸກຜືນໃຫ້ມີຂະຫນາດເທົ່າກັນ.3ຜ້າກັ້ງຫ້າຜືນຈະຕ້ອງໃຫ້ເກາະຕິດກັນ, ແລະອີກຫ້າຜືນນັ້ນຈະຕ້ອງເກາະຕິດກັນດ້ວຍ.

4ເຈົ້າຕ້ອງເຮັດຫູຜ້າກັ້ງດ້ວຍດ້າຍສີຟ້າ ຕິດໄວ້ຕາມປາຍຂອບຜ້າກັ້ງດ້ານນອກສຸດຂອງຜ້າກັ້ງຊຸດທີ່ຫນຶ່ງ. ໃນລັກສະນະດຽວກັນ,
ເຈົ້າຕ້ອງເຮັດປາຍຂອບດ້ານນອກສຸດຂອງຜ້າກັ້ງຊຸດທີ່ສອງ.5ເຈົ້າຕ້ອງເຮັດຫູຫ້າສິບຫູທີ່ຜ້າກັ້ງຊຸດທີ່ຫນຶ່ງ,
ແລະເຈົ້າຕ້ອງເຮັດຫູຜ້າກັ້ງທີ່ຂອບຜ້າກັ້ງໃນຊຸດທີ່ສອງ. ຈົ່ງເຮັດດັ່ງນີ້ ເພື່ອໃຫ້ຫູຜ້າກັ້ງເຫລົ່ານີ້ຢູ່ກົງກັນຂວ້າມກັນລະກັນ.
6ເຈົ້າຕ້ອງເຮັດຂໍທອງຄຳຫ້າສິບຂໍ ແລະເກາະຜ້າກັ້ງທັງສອງຊຸດ ເພື່ອຮ້ອຍໃຫ້ເປັນຫໍເຕັນທີ່ເນື້ອດຽວກັນ.
7ເຈົ້າຕ້ອງເຮັດຜ້າກັ້ງດ້ວຍຂົນແບ້ສຳລັບເຕັນຄຸມຫໍເຕັນ. ເຈົ້າຕ້ອງເຮັດຜ້າກັ້ງເຫລົ່ານັ້ນສິບເອັດຜືນ.
8ຄວາມຍາວຂອງຜ້າກັ້ງແຕ່ລະຜືນຕ້ອງເປັນສາມສິບສອກ, ແລະຄວາມກວ້າງຂອງຜ້າກັ້ງແຕ່ລະຜືນຈະເປັນສີ່ສອກ.
ຜ້າກັ້ງສິບເອັດຜືນຕ້ອງເປັນຂະຫນາດເທົ່າກັນ.9ເຈົ້າຕ້ອງເກາະຜ້າກັ້ງຫ້າຜືນ ໃສ່ແຕ່ລະຜືນໃຫ້ຕິດກັນ ແລະຜ້າກັ້ງອີກຫົກຜືນໃຫ້ເກາະຕິດກັນ.
ເຈົ້າຕ້ອງພັບຜ້າກັ້ງຜືນທີຫົກນັ້ນສອງທົບໃຫ້ຢູ່ຂ້າງຫນ້າຫໍເຕັນ
10ເຈົ້າຕ້ອງເຮັດຫູຜ້າກັ້ງສິບຫູຕິດກັບຂອບຜ້າກັ້ງດ້ານນອກສຸດຊຸດທຳອິດ,
ແລະອີກຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກສຸດຊຸດທີ່ສອງ11ເຈົ້າຕ້ອງເຮັດຂໍທອງແດງຫ້າສິບຂໍ ແລະຈົ່ງເກາະຂໍເຂົ້າທີ່ຫູຜ້າກັ້ງ.
ແລ້ວເຈົ້າໂຍງຫໍເຕັນເຂົ້າດ້ວຍກັນ ເພື່ອໃຫ້ຕິດກັນເປັນຫລັງດຽວ.
12ສ່ວນທີ່ເກີນຢູ່ເຄິ່ງຫນຶ່ງຂອງຜ້າເຕັນ, ຄືວ່າ, ສ່ວນທີ່ເຫລືອຫ້ອຍລົງມາຈາກຜ້າເຕັນ, ຕ້ອງຫ້ອຍທີ່ດ້ານຫລັງຫໍເຕັນ.
13ດ້ານຫນຶ່ງຂອງຜ້າກັ້ງຕ້ອງເປັນຫນຶ່ງສອກ, ແລະອີກດ້ານກໍຍາວຫນຶ່ງສອກ—ສ່ວນທີ່ຍາວເກີນໄປຂອງຜ້າເຕັນຈະຕ້ອງຫ້ອຍລົງມາທາງຂ້າງໆ
ຫໍເຕັນມາຂ້າງຫນຶ່ງ ແລະອີກຂ້າງຫນຶ່ງ ສຳລັບໃຊ້ກຳບັງ.14ເຈົ້າຕ້ອງເຮັດຜ້າຄຸມຫໍເຕັນ ດ້ວຍຫນັງແກະໂຕຜູ້ຍ້ອມສີແດງ,
ແລະຄຸມດ້ວຍຫນັງສັດຢ່າງດີອີກຊັ້ນຫນຶ່ງ.
15ເຈົ້າຕ້ອງເຮັດໂຄງໄມ້ທີ່ຕັ້ງຊື່ສຳລັບຫໍເຕັນຈາກໄມ້ກະຖິນເທດ.16ຄວາມຍາວຂອງແຕ່ລະໂຄງໄມ້ນັ້ນໃຫ້ຍາວສິບສອກ,
ແລະຄວາມກວ້າງຈະຕ້ອງເປັນຫນຶ່ງສອກເຄິ່ງ.17ໃຫ້ໂຄງໄມ້ ແຕ່ລະອັນມີສອງຫ້ອຍເພື່ອໃຫ້ຍຶດຕິດກັນແລະກັນ.
ເຈົ້າຈົ່ງເຮັດໂຄງໄມ້ທຸກອັນຂອງຫໍເຕັນດ້ວຍວິທີນີ້.18ເມື່ອເຈົ້າເຮັດໂຄງໄມ້ສຳລັບຫໍເຕັນ, ເຈົ້າຕ້ອງເຮັດໂຄງຊາວສີ່ອັນສຳລັບດ້ານໃຕ້.
19ເຈົ້າຕ້ອງເຮັດຖານຮອງຮັບດ້ວຍເງິນສີ່ສິບອັນ ສຳລັບວາງໃຕ້ໂຄງໄມ້ຊາວສີ່ອັນ. ຕ້ອງມີຖານສອງອັນຢູ່ໃຕ້ໂຄງທຳອິດສຳລັບສວມຖານສອງອັນ
ແລະໃຕ້ໂຄງອື່ນໆກໍໃຫ້ມີຖານຮອງຮັບສອງຖານສຳລັບສວມຖານສອງອັນດ້ວຍ.20ດ້ານທີ່ສອງຂອງຫໍເຕັນ, ດ້ານທິດເຫນືອນັ້ນ,
ເຈົ້າຕ້ອງໃຊ້ໂຄງໄມ້ຊາວສີ່ອັນ21ແລະຖານເງິນສີ່ສິບອັນ ຈະຕ້ອງມີຖານສອງອັນສຳລັບໂຄງທຳອິດ, ຖານສອງອັນໃຕ້ໂຄງຖັດໄປແລະຕໍ່ໄປເລື້ອຍໆ.
22ສ່ວນດ້ານຫລັງຂອງຫໍເຕັນຂ້າງທິດຕາເວັນຕົກ, ເຈົ້າຕ້ອງເຮັດໂຄງໄມ້ຫົກອັນ.23ເຈົ້າຕ້ອງເຮັດໂຄງສອງອັນສຳລັບມູມຫໍເຕັນດ້ານຫລັງ.
24ໂຄງໄມ້ເຫລົ່ານີ້ດ້ານລຸ່ມໃຫ້ແຍກກັນ ແຕ່ສ່ວນດ້ານເທິງຈະເຊື່ອມຕໍ່ກັນດ້ວຍຂໍດຽວກັນ. ຈະຕ້ອງທຳວິທີນີ້ທີ່ດ້ານຫລັງຂອງທັງສອງມູມ.
25ຈະມີໂຄງໄມ້ແປດອັນ, ພ້ອມກັບຖານເງິນ, ຈະມີຖານສິບຫົກອັນຫມົດທຸກອັນ, ສອງຖານຢູ່ໃຕ້ຂອບທຳອິດຂອງຖານ,
ຖານສອງອັນໃຕ້ຂອບຖັດໄປ, ແລະຂອບຕໍ່ໆໄປ.
26ເຈົ້າຕ້ອງເຮັດຮາວຈາກໄມ້ກະຖິນເທດ—ຫ້າອັນສຳລັບໂຄງໄມ້ຝາຫໍເຕັນດ້ານຫນຶ່ງ.27ອີກຫ້າອັນສຳລັບຮາວໄມ້ຝາຫໍເຕັນດ້ານຫນຶ່ງ,
ແລະອີກຫ້າອັນສຳລັບຮາວໄມ້ຝາຫໍເຕັນດ້ານຫລັງທີ່ດ້ານທິດຕະວັນຕົກ.28ຮາວທາງກາງຊຶ່ງຢູ່ຕອນກາງຂອງໂຄງໄມ້,
ທີ່ຈະຕ້ອງຮ້ອຍໄມ້ໃຫ້ຕິດກັນ, ຈາກປາຍເຖິງປາຍອີກຫນຶ່ງໄປອີກປາຍເບື້ອງຫນຶ່ງ.
29ເຈົ້າຕ້ອງຫຸ້ມໂຄງໄມ້ເຫລົ່ານັ້ນດ້ວຍຄຳ. ເຈົ້າຕ້ອງເຮັດຂໍເກາະຄຳສຳລັບຮ້ອຍກອນ, ເພື່ອພວກມັນຈະຍຶດຮາວເຫລົ່ານັ້ນ,
ແລະເຈົ້າຕ້ອງຫຸ້ມກອນເຫລົ່ານັ້ນດ້ວຍຄຳ.30ເຈົ້າຕ້ອງຕັ້ງຫໍເຕັນນັ້ນເປັນຮູບແບບທີ່ເຮົາໄດ້ສະແດງແກ່ເຈົ້າແລ້ວເທິງພູ.
31ເຈົ້າຕ້ອງເຮັດຜ້າກັ້ງຜືນຫນຶ່ງຫຍິບດ້ວຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ ແລະຜ້າເລນິນເນື້ອດີ, ແສ່ວເປັນຮູບເຄຣຸບ,
ຊຶ່ງເປັນວຽກຂອງຊ່າງຝີມືທີ່ຊຳນານ.32ເຈົ້າຕ້ອງແຂວນຜ້າກັ້ງນັ້ນໄວ້ທີ່ເສົາໄມ້ກະຖິນເທດສີ່ເສົາທີ່ຫຸ້ມດ້ວຍຄຳ
ເສົານີ້ຈະຕ້ອງມີຂໍຄຳທີ່ຕັ້ງຢູ່ເທິງຖານເງິນສີ່ອັນ.33ເຈົ້າຕ້ອງແຂວນຜ້າກັ້ງນັ້ນໃຕ້ຂໍສຳລັບເກາະຜ້າກັ້ງນັ້ນ, ແລະເຈົ້າຕ້ອງເອົາຫີບພຣະໂອວາດ
ເຂົ້າມາໄວ້ໃນດ້ານໃນຫລັງຜ້າກັ້ງ. ແລະຜ້າກັ້ງນັ້ນຈະແບ່ງຫໍເຕັນອອກເປັນສອງສ່ວນ ຈາກສະຖານສັກສິດທີ່ສຸດ.
34ເຈົ້າຈົ່ງຕັ້ງຝາຫີບໄຖ່ບາບນັ້ນໄວ້ ເທິງຫີບພຣະໂອວາດ, ໃນສະຖານສັກສິດທີ່ສຸດ.35ເຈົ້າຕ້ອງຕັ້ງໂຕະໄວ້ຂ້າງນອກຜ້າກັ້ງ.
ເຈົ້າຕ້ອງວາງຄັນຕະກຽງກົງກັນຂວ້າມກັບໂຕະທາງດ້ານທິດໃຕ້ຂອງຫໍເຕັນ. ໂຕະຕ້ອງຕັ້ງໄວ້ທາງດ້ານເຫນືອ.
36ເຈົ້າຕ້ອງເຮັດຜ້າກັ້ງບັງຕາທີ່ປະຕູທາງເຂົ້າຫໍເຕັນ. ເຈົ້າຕ້ອງເຮັດດ້ວຍດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ ແລະດ້ວຍຜ້າເລນິນສອງເສັ້ນ,
ຊຶ່ງເປັນງານຊ່າງແສ່ວ.37ສຳລັບການແຂວນ, ເຈົ້າຕ້ອງເຮັດເສົາຫ້າຕົ້ນຈາກໄມ້ກະຖິນເທດ ແລະຫຸ້ມດ້ວຍຄຳ.
ຂໍຂອງເສົາເຫລົ່ານັ້ນຕ້ອງເຮັດດ້ວຍຄຳ, ແລະເຈົ້າຕ້ອງຫລໍ່ຖານທອງແດງຫ້າອັນສຳລັບຮອງຮັບເສົານັ້ນ.

27 1ເຈົ້າຕ້ອງເຮັດແທ່ນບູຊາຈາກໄມ້ກະຖິນເທດຍາວຫ້າສອກ ແລະກວ້າງຫ້າສອກ. ແທ່ນບູຊາຈະຕ້ອງເປັນສີ່ລ່ຽມຈັດຕຸລັດ
ແລະສູງສາມສອກ. 2ເຈົ້າຕ້ອງເຮັດຍອດແທ່ນສີ່ມູມເທິງໃຫ້ແຫລມເຫມືອນເຂົາງົວໂຕຜູ້ ຍອດເຫລົ່ານັ້ນເຮັດເປັນເນື້ອດຽວກັນກັບແທ່ນບູຊາ.
ແລະເຈົ້າຕ້ອງຫຸ້ມດ້ວຍທອງແດງ.

3ເຈົ້າຕ້ອງເຮັດອຸປະກອນສຳລັບແທ່ນບູຊາຄື: ພວກຫມໍ້ສຳລັບໃສ່ຂີ້ເຖົ່າ, ແລະພວກຊວ້ານ, ອ່າງລ້າງມື, ສ້ອມຕັດຊີ້ນ, ແລະຖາດຮອງໄຟຕ່າງໆ
ເຈົ້າຕ້ອງເຮັດເຄື່ອງໃຊ້ທຸກຢ່າງດ້ວຍທອງແດງ. 4ເຈົ້າຕ້ອງເຮັດເຫລັກຮອງເຕົາໄຟສຳລັບແທ່ນບູຊາ, ດ້ວຍທອງແດງ.
ຈົ່ງເຮັດຫູທອງແດງຕິດທັງສີ່ມູມຂອງເຫລັກຮອງເຕົາໄຟນັ້ນ.
5ເຈົ້າຕ້ອງເຮັດເຫລັກຮອງຕີນຢູ່ໃຕ້ຂອບຂອງແທ່ນບູຊາ, ລະດັບກາງຂອງແທ່ນບູຊາ. 6ເຈົ້າເຮັດໄມ້ຄານຫາມແທ່ນບູຊາ, ຈາກໄມ້ກະຖິນເທດ,
ແລະເຈົ້າຕ້ອງຫຸ້ມດ້ວຍທອງແດງ.
7ໄມ້ຄານນັ້ນຕ້ອງສອດໃສ່ຂໍເກາະ, ແລະໄມ້ຄານຈະຕ້ອງຢູ່ຂ້າງແທ່ນບູຊາທັງສອງດ້ານ, ເພື່ອໃຊ້ຫາມ. 8ເຈົ້າຕ້ອງເຮັດແທ່ນນັ້ນດ້ວຍໄມ້ກະດານ,
ແຕ່ຂ້າງໃນແທ່ນໃຫ້ເປັນຮູ, ເຈົ້າຕ້ອງເຮັດຕາມແບບທີ່ເຮົາໄດ້ສະແດງແກ່ເຈົ້າແລ້ວເທິງພູນັ້ນ.
9ເຈົ້າຕ້ອງເຮັດລານຫໍເຕັນ. ຈະຕ້ອງມີຜ້າກັ້ງທາງດ້ານໃຕ້ຂອງລານ, ຜ້າກັ້ງເຮັດດ້ວຍຜ້າປ່ານດ້າຍຄູ່ຍາວຫນຶ່ງຮ້ອຍສອກ.
10ສ່ວນຜ້າກັ້ງຈະຕ້ອງໃຫ້ມີເສົາຊາວຕົ້ນ, ກັບຖານທອງແດງຊາວຖານ. ເຊັ່ນດຽວກັນຈະຕ້ອງມີຮ່ວງຂໍເງິນເພື່ອຈະເກາະເສົາ,
ເຫມືອນຮາວເງິນຍຶດເສົາຕ່າງໆ.
11ໃນເຊັ່ນດຽວກັນດ້ານທິດເຫນືອ, ຈະຕ້ອງມີຜ້າກັ້ງຍາວຫນຶ່ງຮ້ອຍສອກຕິດກັບເສົາຊາວຕົ້ນ, ຖານທອງແດງຊາວຖານຂໍເກາະເງິນ
ແລະຮາວເງິນສຳລັບຍຶດເສົາຕ່າງໆ. 12ດ້ານຕາເວັນຕົກຂອງລານຈະຕ້ອງມີຜ້າກັ້ງຍາວຫ້າສິບສອກ. ຈະຕ້ອງມີເສົາສິບຕົ້ນ
ແລະຖານຮອງສິບເສົາສິບຖານ. 13ລານດ້ານຕະເວັນອອກຈະຕ້ອງມີຜ້າກັ້ງຍາວຫ້າສິບສອກເຊັ່ນກັນ.
14ຜ້າກັ້ງດ້ານທາງເຂົ້າຂ້າງຫນຶ່ງຈະຕ້ອງຍາວສິບຫ້າສອກ, ຈະຕ້ອງມີເສົາສາມຕົ້ນ ພ້ອມກັບຖານຮອງຮັບເສົາສາມຖານ.
15ອີກຂ້າງຫນຶ່ງໃຫ້ມີຜ້າກັ້ງຍາວສິບຫ້າສອກ. ຈະຕ້ອງມີເສົາສາມຕົ້ນ ແລະຖານຮອງຮັບເສົາສາມຖານ.
16ປະຕູຂອງລານຈະຕ້ອງເປັນຜ້າກັ້ງຍາວຊາວສອກ. ຜ້າກັ້ງຈະຕ້ອງເຮັດດ້ວຍດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ ແລະຜ້າປ່ານດ້າຍຄູ່ເນື້ອດີ
ຊຶ່ງເປັນວຽກຂອງຊ່າງແສ່ວ. ຈະຕ້ອງມີເສົາສີ່ຕົ້ນ ແລະ ຖານຮອງຮັບເສົາສີ່ຖານ.
17ເສົາທັງຫມົດທີ່ຮອບລານຕ້ອງມີຮາວເງິນ, ຂໍເກາະເງິນ, ແລະຖານທອງແດງ. 18ຄວາມຍາວຂອງຜ້າຮອບລານຈະຕ້ອງເປັນຫນຶ່ງຮ້ອຍສອກ,
ກວ້າງຫ້າສິບສອກ, ແລະສູງຫ້າສອກເຮັດດ້ວຍຜ້າປ່ານດ້າຍຄູ່ເນື້ອດີໃຊ້ຂໍເກາະທັງຫມົດ, ແລະຖານທອງແດງ.
19ອຸປະກອນທຸກອັນທີ່ຈະໃຊ້ໃນຫໍເຕັນ, ແລະພ້ອມທັງຫລັກຫມຸດທຸກອັນຂອງຫໍເຕັນ, ແລະ
ເຫລັກຫມຸດທຸກອັນຂອງລານຫໍເຕັນນັ້ນຕ້ອງເຮັດດ້ວຍທອງແດງ.
20ເຈົ້າຕ້ອງສັ່ງປະຊາຊົນອິສະຣາເອນໃຫ້ນຳນ້ຳມັນຫມາກກອກ, ບໍຣິສຸດ, ແລະທີ່ສະກັດໄວ້ແລ້ວ, ສຳລັບຕະກຽງ
ສະນັ້ນພວກເຂົາຈະໄດ້ໃຫ້ໄຟລຸກໄຫມ້ຢູ່ສະເຫມີ. 21ໃນຫໍເຕັນແຫ່ງຊຸມນຸມ ຂ້າງນອກຜ້າກັ້ງ ຊຶ່ງຢູ່ຫນ້າຫໍເຕັນທີ່ມີຫີບພຣະໂອວາດ, ໃຫ້ອາໂຣນ
ແລະບັນດາລູກຊາຍຂອງລາວດູແລຕະກຽງໃຫ້ລຸກໄຫມ້ຢູ່ສະເຫມີຕໍ່ພຣະພັກພຣະຢາເວ, ຕັ້ງແຕ່ຕອນແລງຈົນເຖິງຕອນເຊົ້າ.
ກົດນີ້ຈະເປັນຂໍ້ປະຕິບັດຖາວອນ ສຳລັບປະຊາຊົນອິສະຣາເອນທຸກຣຸ້ນ.

28 1ຈົ່ງໄປເອີ້ນອາໂຣນອ້າຍຂອງເຈົ້າ ແລະບັນດາລູກໆຂອງລາວ —ນາດາບ, ອາບີຮູ, ເອເຣອາຊາ, ແລະອິທາມາ—
ອອກຈາກທ່າມກາງຊາວອິສະຣາເອນເພື່ອວ່າພວກເຂົາຈະຮັບໃຊ້ເຮົາໃນຖານະປະໂລຫິດ. 2ເຈົ້າຕ້ອງເຮັດເຄື່ອງແຕ່ງກາຍສຳລັບອາໂຣນ,
ອ້າຍຂອງເຈົ້າ, ເຄື່ອງແຕ່ງກາຍນີ້ຈະເປັນກຽຕ ແລະຄວາມສະຫງ່າງາມຂອງລາວ. 3ເຈົ້າຈົ່ງເວົ້າກັບປະຊາຊົນທັງຫມົດຊຶ່ງຈິດໃຈສະຫລາດ,
ຄົນເຫລົ່ານັ້ນທີ່ເຮົາໃຫ້ພວກເຂົາເຕັມປ່ຽມດ້ວຍສະຕິປັນຍາ, ເພື່ອພວກເຂົາຈະໄດ້ເຮັດເຄື່ອງແຕ່ງກາຍບໍຣິສຸດສຳລັບອາໂຣນ
ເພື່ອຮັບໃຊ້ເຮົາໃນຖານະປະໂລຫິດຂອງເຮົາ.

4ເຄື່ອງແຕ່ງກາຍທີ່ໃຫ້ພວກເຂົາຕ້ອງເຮັດ, ເຄື່ອງປ້ອງກັນເອິກ, ເອໂຟດ, ເສື້ອຄຸມ, ເສື້ອຄຸມຖັກ, ຜ້າໂພກຫົວ, ແລະສາຍຮັດແອວ.
ພວກເຂົາຈະຕ້ອງເຮັດເຄື່ອງແຕ່ງກາຍແຍກຕ່າງຫາກສຳລັບເຮົາ. ພວກເຂົາຈະເຮັດເພື່ອອາໂຣນອ້າຍຂອງເຈົ້າ ແລະບັນດາລູກຊາຍຂອງລາວ
ເພື່ອພວກເຂົາຈະໄດ້ຮັບໃຊ້ເຮົາໃນຖານະປະໂລຫິດ. 5ພວກຊ່າງຝີມືຕ້ອງໃຊ້ຜ້າປ່ານເນື້ອດີ, ໃຊ້ຄຳ, ດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ.
6ພວກເຂົາຕ້ອງເຮັດເສື້ອເອໂຟດເຮັດດ້ວຍທອງຄຳ, ດ້ວຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ແລະຜ້າປ່ານສອງເສັ້ນເນື້ອດີ.
ຕ້ອງເປັນວຽກຂອງຊ່າງຝີມືຜູ້ຊຳນານ. 7ຕ້ອງມີແຖບມັດບ່າສອງຂື້ນທີ່ມູມດ້ານເທິງສອງຂ້າງ.
8ສາຍຮັດແອວທີ່ຖັກຢ່າງລະອຽດເຫມືອນກັບເຮັດເອໂຟດ; ຕ້ອງເຮັດໃຫ້ເປັນເນື້ອດຽວກັນເສື້ອເອໂຟດ, ເຮັດຈາກຜ້າປ່ານເນື້ອດີເສັ້ນຄູ່
ດ້ວຍທອງຄຳ, ດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ. 9ເຈົ້າຕ້ອງໃຊ້ພອຍສີນ້ຳເຂົ້າສອງແຜ່ນ ແລະສະຫລັກຊື່ລູກຊາຍເທິງແຜ່ນຫີນ
ແລະນັ້ນເປັນຊື່ຂອງລູກຊາຍທັງສິບສອງຄົນຂອງອິສະຣາເອນ.
10ຫີນແຜ່ນທີ່ຫນຶ່ງຈະຕ້ອງມີຫົກຊື່, ແລະອີກຫົກຊື່ຕ້ອງຢູ່ເທິງຫີນອີກແຜ່ນ, ຕາມລຳດັບການເກີດຂອງບັນດາລູກຊາຍ.
11ວຽກຂອງຊ່າງແກະສະຫລັກຫີນ ເປັນເຫມືອນຢ່າງແກະສະຫລັກຕຣາປຣະທັບ,
ເຈົ້າຕ້ອງແກະສະຫລັກຫີນສອງແຜ່ນດ້ວຍຊື່ຂອງລູກຊາຍສິບສອງຄົນຂອງອິສະຣາເອນ. ເຈົ້າຕ້ອງຕິດບັນດາຫີນເທິງເຮືອນຄຳ.
12ເຈົ້າຕ້ອງຮ້ອຍຫີນທັງກ້ອນນີ້ ເຂົ້າກັບແຖບທັງສອງຂ້າງຂອງເສື້ອເອໂຟດ,
ຫີນເຫລົ່ານັ້ນຈະເຮັດໃຫ້ພຣະຢາເວລະນຶກເຖິງບັນດາລູກຊາຍຂອງອິສະຣາເອນ.
ອາໂຣນຈະແບກຊື່ຂອງພວກເຂົາທັງຫມົດໄວ້ເທິງບ່າທັງສອງຂ້າງ ຕໍ່ພຣະພັກພຣະຢາເວເພື່ອໃຫ້ເປັນທີ່ລະນຶກເຖິງ.
13ເຈົ້າຕ້ອງເຮັດເຮືອນທອງຄຳ 14ແລະສາຍຄໍສອງເສັ້ນເຮັດດ້ວຍຄຳບໍຣິສຸດເຫມືອນຖັກເປັນເຊືອກ, ແລະເຈົ້າຕ້ອງຕິດສາຍຄໍທີ່ເຮືອນທອງຄຳ.
15ເຈົ້າຕ້ອງເຮັດເຄື່ອງຮັດເອິກແຫ່ງການຕັດສິນ, ຊຶ່ງເປັນວຽກຂອງຊ່າງຝີມືຜູ້ຊຳນານ, ເຫມືອນກັບທີ່ໃຊ້ເຮັດເສື້ອເອໂຟດ. ເຮັດດ້ວຍຄຳ, ສີຟ້າ,
ສີມ່ວງ, ແລະຜ້າຂົນສັດສີແດງເຂັ້ມ ແລະຜ້າປ່ານເນື້ອດີ. 16ໃຫ້ເຮັດເປັນຮູບສີ່ຫລ່ຽມຈັດຕຸລັດ. ເຈົ້າຕ້ອງພັບຜ້າສອງທົບ ຍາວຫນຶ່ງຊ່ວງ
ແລະກວ້າງຫນຶ່ງຊ່ວງ
17ເຈົ້າຕ້ອງຕິດພອຍເປັນສີ່ແຖວ. ແຖວທຳອິດຈະຕ້ອງຕິດທັບທິມ, ລູກລາຄຳ, ແລະພອຍແດງສີເຂັ້ມ. 18ແຖວທີສອງຕ້ອງຕິດມໍຣະກົດ, ມະນີໂຊດ,
ແລະເພັດ. 19ແຖວທີສາມຕ້ອງຕິດນິນ, ໂມຣາ, ແລະພອຍສີມ່ວງ. 20ແຖວທີສີ່ຕ້ອງຕິດພອຍຂຽວ, ພອຍສີນ້ຳເຂົ້າ, ແລະພອຍສີນ້ຳຕານ.
ພອຍເຫລົ່ານີ້ຕ້ອງຕິດໃນເຮືອນທອງຄຳ.
21ພອຍທັງຫລາຍຕ້ອງຈັດລຽງຕາມຊື່ຂອງລູກຊາຍຂອງອິສະຣາເອນສິບສອງຄົນ, ໄວ້ຕາມລຳດັບຊື່.
ພວກຫີນນັ້ນຕ້ອງເຫມືອນແກະສະຫລັກຕຣາປຣະທັບ, ແຕ່ລະຊື່ຈະແທນແຕ່ລະເຜົ່າຈາກສິບສອງເຜົ່າ. 22ເຈົ້າຕ້ອງເຮັດເສື້ອຮັດເອິກ
ລັກສະນະຄ້າຍເຊືອກຖັກເຂົ້າກັນ, ເປັນວຽກຖັກດ້ວຍທອງຄຳບໍຣິສຸດ. 23ເຈົ້າຕ້ອງເຮັດຫູຄຳສອງຫູສຳລັບເສື້ອຮັດເອິກ
ແລະຕ້ອງຕິດທີ່ມູມເທິງທັງສອງຂອງເສື້ອຮັດເອິກ. 24ເຈົ້າຕ້ອງຕິດຫູສອງຫູທີ່ມູມສອງມູມຂອງຜ້າທັບເອິກ.
25ເຈົ້າຕ້ອງຕິດທີ່ປາຍຂອງສາຍຄໍຖັກທັງສອງຂ້າງ ແລ້ວໃຫ້ຕິດກັບບ່າທັງສອງຂ້າງ.
ແລ້ວເຈົ້າຕ້ອງຕິດສິ່ງເຫລົ່ານີ້ທີ່ແຖບຍຶດເສື້ອເອໂຟດເທິງບ່າໄວ້ທີ່ດ້ານຫນ້າ. 26ເຈົ້າຕ້ອງເຮັດຫູທອງຄຳສອງຫູ,
ແລະເຈົ້າຕ້ອງຕິດທີ່ມູມລຸ່ມທັງສອງມູມຂອງເສື້ອເຮັດເອິກ, ເທິງມູມຖັດໄປຂ້າງໃນ.
27ເຈົ້າຕ້ອງເຮັດຫູທອງຄຳສອງຫູ, ແລະເຈົ້າຕ້ອງສອດໃຕ້ແຖບທີ່ມັດບ່າທັງສອງຂອງເສື້ອເອໂຟດກົງກັບດ້ານຫນ້າ.
ໃກ້ກັບຮອຍເຫນືອສາຍຮັດແອວ ຊຶ່ງຖັກຢ່າງລະອຽດຂອງເສື້ອເອໂຟດ. 28ພວກເຂົາຕ້ອງມັດເສື້ອຮັດເອິກດ້ວຍຫູຂອງມັນ
ແລະຮ້ອຍກັບຫູຂອງເສື້ອເອໂຟດດ້ວຍດ້າຍຖັກສີຟ້າ, ເພື່ອທີ່ຈະຕິດທັບສາຍຮັດແອວຖັກເສື້ອເອໂຟດ.
ສິ່ງນີ້ກໍເພື່ອທີ່ຈະບໍ່ໃຫ້ເສື້ອຮັດເອິກຫລຸດຈາກເສື້ອເອໂຟດ.
29ເມື່ອອາໂຣນເຂົ້າໄປໃນສະຖານບໍຣິສຸດ, ລາວຕ້ອງແຂວນຊື່ບັນດາລູກຊາຍຂອງອິສະຣາເອນຈາຣຶກ
ໄວ້ທີ່ເອິກຂອງລາວໃນເສື້ອຮັດເອິກແຫ່ງການຕັດສິນ, ໃຫ້ເປັນທີ່ລະນຶກຕໍ່ພຣະພັກພຣະຢາເວສະເຫມີ. 30ເຈົ້າຈົ່ງສອດອູຣິມ
ແລະທູມມິມໄວ້ໃນເສື້ອຮັດເອິກແຫ່ງການຕັດສິນ, ເພື່ອທີ່ທັງສອງສິ່ງນີ້ຈະແນບທີ່ໃຈຂອງອາໂຣນ ເມື່ອລາວເຂົ້າມາຫາພຣະຢາເວ.
ດັ່ງນັ້ນອາໂຣນຈະນຳເອົາເຄື່ອງມືການຕັດສິນໃຈ ເພື່ອປະຊາຊົນອິສະຣາເອນໄວ້ທີ່ຫົວໃຈຂອງລາວ ຢູ່ຕໍ່ພຣະພັກພຣະຢາເວສະເຫມີ.
31ເຈົ້າຕ້ອງເຮັດເສື້ອຄຸມໃຫ້ເຂົ້າກັບເສື້ອເອໂຟດ ດ້ວຍຜ້າສີມ່ວງລ້ວນ. 32ໃຫ້ເຮັດຊ່ອງຫວ່າງທາງກາງຜືນເສື້ອສຳລັບສວມທາງຫົວ
ຊ່ອງຫວ່າງນີ້ຈະມີແຖບຖັກທໍຮອບຄຳ ເພື່ອເສື້ອຈະບໍ່ຂາດ. ສິ່ງນີ້ຈະຕ້ອງເປັນວຽກຂອງຊ່າງຫຍິບ.
33ທາງດ້ານລຸ່ມຂອງເສື້ອຄຸມ, ເຈົ້າຕ້ອງເຮັດຫມາກພິລາຕ່າງໆດ້ວຍດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມຮອບເສື້ອຄຸມ.
ກະດິງຄຳຕ້ອງຕິດສະລັບໂດຍຮອບ. 34ຈະຕ້ອງມີກະດິງຄຳຫນ່ວຍຫນຶ່ງ ແລະຫມາກພິລາອີກຫນ່ວຍຫນຶ່ງ,
ຈະຕ້ອງມີຫມາກກະດິງຄຳອີກຫນ່ວຍຫນຶ່ງ ແລະຫມາກພິລາອີກຫນ່ວຍຫນຶ່ງ—ແລະຕໍ່ໆໄປ—ຮອບດ້ານລຸ່ມຂອງເສື້ອຄຸມ.
35ອາໂຣນຈະນຸ່ງເສື້ອຄຸມນີ້ ເມື່ອລາວຮັບໃຊ້, ເພື່ອວ່າສຽງກະດິງຈະໄດ້ຍິນ ເມື່ອລາວເຂົ້າໄປຢູ່ຕໍ່ພຣະພັກພຣະຢາເວໃນສະຖາບໍຣິສຸດ
ແລະເມື່ອລາວອອກມາ. ນີ້ແຫລະວ່າລາວຈະບໍ່ຕາຍ.
36ເຈົ້າຕ້ອງເຮັດແຜ່ນທອງຄຳບໍຣິສຸດ ແລະສະຫລັກໄວ້ເຫມືອນຢ່າງແກະສະຫລັກຕຣາປຣະທັບວ່າ,
"ບໍຣິສຸດແດ່ພຣະຢາເວ." 37ເຈົ້າຕ້ອງເອົາດ້າຍຖັກສີຟ້າມັດແຜ່ນຄຳນັ້ນໄວ້ໃຫ້ຢູ່ທີ່ຫນ້າຜ້າໂພກຫົວ.
38ແຜ່ນທອງຄຳນັ້ນຈະຢູ່ເທິງຫນ້າຜາກຂອງອາໂຣນ; ລາວຕ້ອງແບກຄວາມຜິດຕ່າງໆ


generated on Tue Jun 17 19:01:42 2025

ກ່ຽວເນື່ອງກັບເຄື່ອງບູຊາອັນບໍຣິສຸດທີ່ຊາວອິສະຣາເອນນຳມາຖວາຍແດ່ພຣະຢາເວ. ຈະຕ້ອງມັດຜ້າໂພກຫົວທີ່ໜ້າຜາກຂອງລາວໄວ້ສະເໝີ.
ເພື່ອພຣະຢາເວຈະຮັບເຄື່ອງຖວາຍຂອງພວກເຂົາ.
[39]ເຈົ້າຕ້ອງເຮັດເສື້ອຄຸມດ້ວຍຜ້າປ່ານເນື້ອດີ, ແລະເຈົ້າຕ້ອງໂພກຫົວນັ້ນດ້ວຍຜ້າປ່ານເນື້ອດີ. ເຈົ້າຕ້ອງເຮັດສາຍແອວດ້ວຍ,
ຊຶ່ງເປັນວຽກຂອງຊ່າງແສ່ວ.
[40]ສຳລັບບັນດາລູກຊາຍຂອງອາໂຣນ ເຈົ້າຕ້ອງເຮັດບັນດາເສື້ອຄຸມ, ສາຍແອວ,
ແລະຜ້າໂພກຫົວເພື່ອເປັນກຽຕແລະຄວາມສະຫງ່າງາມຂອງພວກເຂົາ. [41]ເຈົ້າຕ້ອງນຸ່ງຊຸດໃຫ້ອາໂຣນ ອ້າຍຂອງເຈົ້າ,
ແລະບັນດາລູກຊາຍຂອງລາວ, ເຈົ້າຕ້ອງເຈີມພວກເຂົາ, ສະຖາປະນາພວກເຂົາ, ແລະແຍກພວກເຂົາອອກຕ່າງຫາກເພື່ອເຮົາ,
ເພື່ອວ່າພວກເຂົາຈະຮັບໃຊ້ເຮົາໃນຖານະປະໂລຫິດທັງຫລາຍ.
[42]ເຈົ້າຕ້ອງເຮັດບັນດາເສື້ອຊັ້ນໃນໃຫ້ພວກເຂົາດ້ວຍຜ້າເລນິນທີ່ຈະປົກປິດຮ່າງກາຍຂອງພວກເຂົາ,
ຊຶ່ງຈະປົກຄຸມພວກເຂົາຕັ້ງແຕ່ແອວໄປຈົນເຖິງຕົ້ນຂາ. [43]ອາໂຣນແລະບັນດາລູກຊາຍຂອງລາວຕ້ອງນຸ່ງເຄື່ອງແຕ່ງກາຍເຫລົ່ານີ້
ຫລືເມື່ອພວກເຂົາເຂົ້າໃກ້ແທ່ນບູຊາເພື່ອຈະຮັບໃຊ້ໃນສະຖານທີ່ບໍຣິສຸດ. ພວກເຂົາຕ້ອງເຮັດສິ່ງນີ້ ເພື່ອພວກເຂົາຈະບໍ່ມີຄວາມຜິດ ຫລືບໍ່ດັ່ງນັ້ນ
ພວກເຂົາຈະຕາຍ. ເລື່ອງນີ້ໃຫ້ເປັນກົດຖາວອນສຳລັບອາໂຣນ ແລະເຊື້ອສາຍຂອງລາວສືບໄປ.

29 1ຕໍ່ໄປນີ້ຄືສິ່ງທີ່ເຈົ້າຈະຕ້ອງເຮັດທີ່ຈະແຍກພວກເຂົາໄວ້ສໍາລັບເຮົາ ເພື່ອພວກເຂົາຈະຮັບໃຊ້ເຮົາໃນຖານະປະໂລຫິດ.
ຈົ່ງເອົາງົວຫນຸ່ມໂຕຫນຶ່ງ ແລະແກະຜູ້ສອງໂຕຊຶ່ງປາສະຈາກຕໍາຫນິ,2ເຂົ້າຈີໄຮ້ເຊື້ອແປ້ງ, ແລະເຄັກໄຮ້ເຊື້ອແປ້ງປົນນໍ້າມັນ.
ພ້ອມທັງເຂົ້າຫນົມແຜ່ນບາງໄຮ້ເຊື້ອແປ້ງທານໍ້າມັນ. ຈົ່ງເຮັດເຂົ້າຫນົມເຫລົ່ານີ້ດ້ວຍແປ້ງສາລີຢ່າງດີ.

3ເຈົ້າຈົ່ງໃສ່ເຂົ້າຫນົມເຫລົ່ານີ້ໄວ້ໃນກະຕ່າດຽວ, ຈົ່ງນໍາມາພ້ອມກັບກະຕ່າ, ແລະຖວາຍພ້ອມກັບງົວໂຕຜູ້ ແລະແກະໂຕຜູ້ສອງໂຕ.
4ເຈົ້າຕ້ອງພາອາໂຣນ ແລະບັນດາລູກຊາຍຂອງລາວມາສະແດງຕົວທີ່ປະຕູຫໍເຕັນແຫ່ງຊຸມນຸມ. ເຈົ້າຈົ່ງຊໍາຣະຕົວອາໂຣນ
ແລະບັນດາລູກຊາຍຂອງລາວໃນນໍ້າ.
5ເຈົ້າຕ້ອງນໍາເຄື່ອງແຕ່ງກາຍ ແລະສວມໃສ່ໃຫ້ອາໂຣນດ້ວຍເສື້ອຄຸມ, ເສື້ອຄຸມຍາວເອໂຟດ, ເສື້ອເອໂຟດ, ແລະເສື້ອຮັດເອິກ,
ມັດສາຍແອວຂອງເອໂຟດທີ່ຖັກແສ່ວຢ່າງວິຈິດບັນຈົງໃຫ້ແຫນັ້ນຮອບລາວ.6ເຈົ້າຕ້ອງພັນຜ້າໂພກຫົວໃສ່ເທິງຫົວຂອງລາວ
ແລະສວມມົງກຸດບໍຣິສຸດທັບຜ້າໂພກຫົວ.7ແລ້ວເອົານໍ້າມັນເຈີມມາ ແລະຖອກລົງໃສ່ຫົວຂອງລາວ ແລະນີ້ແຫລະເປັນວິທີທີ່ເຈີມລາວ.
8ເຈົ້າຕ້ອງນໍາບັນດາລູກຊາຍຂອງລາວມາ ແລະສວມເສື້ອຄຸມໃຫ້ພວກເຂົາ.9ເຈົ້າຕ້ອງໃຫ້ອາໂຣນ ແລະບັນດາລູກຊາຍຂອງລາວໃສ່ສາຍຮັດແອວ
ແລະຈົ່ງໃສ່ສາຍຮັດຫົວໃຫ້ພວກເຂົາ. ແລ້ວວຽກໃນຖານະປະໂລຫິດກໍຈະເປັນຂອງພວກເຂົາຕາມກົດບັນຍັດຕະລອດໄປ.
ນີ້ແຫລະເປັນວິທີທີ່ເຈົ້າຕ້ອງສະຖາປະນາອາໂຣນ ແລະບັນດາລູກຊາຍຂອງລາວໄວ້ເພື່ອຮັບໃຊ້ເຮົາ.
10ເຈົ້າທຸກຄົນຕ້ອງນໍາງົວຜູ້ມາຕໍ່ຫນ້າຫໍເຕັນແຫ່ງຊຸມນຸມ, ແລະໃຫ້ອາໂຣນກັບບັນດາລູກຊາຍຂອງລາວວາງມືລົງເທິງຫົວງົວ.
11ເຈົ້າຕ້ອງຂ້າງົວຜູ້ນັ້ນ ຕໍ່ພຣະພັກພຣະຢາເວທີ່ທາງເຂົ້າປະຕູຫໍເຕັນແຫ່ງຊຸມນຸມ.
12ເຈົ້າຕ້ອງນໍາເລືອດງົວບາງສ່ວນ ແລະໃຊ້ນິ້ວມືຈຸ່ມທາທີ່ເຂົາຂອງແທ່ນບູຊາ, ແລະເຈົ້າຕ້ອງຖອກເລືອດທີ່ເຫລືອທີ່ຖານຂອງແທ່ນບູຊາ.
13ເຈົ້າຕ້ອງເອົາໄຂມັນທັງຫມົດທີ່ຫຸ້ມເຄື່ອງໃນ, ແລະໄຂມັນທັງຫມົດທີ່ຫຸ້ມຕັບ ແລະໄຕທັງສອງຫນ່ວຍ ທັງໄຂມັນທີ່ຕິດໄຕນັ້ນ;
ມາເຜົາທັງຫມົດເທິງແທ່ນບູຊາ.14ແຕ່ຊີ້ນກັບຫນັງ, ຂີ້ຂອງງົວນັ້ນ, ເຈົ້າຕ້ອງເຜົາໄຟທີ່ນອກຄ້າຍ. ນີ້ເປັນເຄື່ອງບູຊາຖວາຍໄຖ່ບາບ.
15ເຈົ້າຕ້ອງນໍາແກະຜູ້ໂຕຫນຶ່ງມາ, ແລະອາໂຣນ ແລະບັນດາລູກຊາຍຂອງລາວຕ້ອງວາງມືເທິງຫົວແກະນັ້ນ.16ເຈົ້າຕ້ອງຂ້າແກະໂຕນັ້ນ
ແລະເອົາເລືອດພົມໄປຮອບໆແທ່ນບູຊາ.17ເຈົ້າຕ້ອງຕັດແກະໂຕນັ້ນອອກເປັນຕ່ອນໆ ແລະລ້າງເຄື່ອງໃນກັບຂາມັນ,
ແລະເຈົ້າຕ້ອງວາງເຄື່ອງໃນໄວ້ກັບສ່ວນອື່ນໆ, ແລະພ້ອມກັບຫົວຂອງມັນ.18ເທິງແທ່ນບູຊານັ້ນຈົ່ງເຜົາແກະໂຕຜູ້ທັງໂຕ.
ເປັນເຄື່ອງເຜົາຖວາຍບູຊາແດ່ພຣະຢາເວ, ເປັນກິ່ນທີ່ຫອມ, ເປັນເຄື່ອງຖວາຍບູຊາດ້ວຍໄຟແດ່ພຣະຢາເວ.
19ເຈົ້າຕ້ອງນໍາແກະໂຕຜູ້ອີກໂຕຫນຶ່ງມາ ແລະໃຫ້ອາໂຣນ ແລະບັນດາລູກຊາຍຂອງລາວຕ້ອງວາງມືເທິງຫົວຂອງແກະນັ້ນ.
20ແລ້ວເຈົ້າຕ້ອງຂ້າແກະໂຕຜູ້ ແລະນໍາເລືອດສ່ວນຫນຶ່ງມາ ທາທີ່ປາຍໃບຫູຂ້າງຂວາຂອງອາໂຣນ,
ແລະປາຍໃບຫູຂ້າງຂວາຂອງບັນດາລູກຊາຍຂອງລາວ, ທີ່ນິ້ວໂປ້ມືຂ້າງຂວາ, ແລະທີ່ນິ້ວໂປ້ຕີນຂ້າງຂວາຂອງພວກເຂົາ.
ແລ້ວເຈົ້າຕ້ອງພົມເລືອດຮອບໆແທ່ນບູຊາທຸກດ້ານ.
21ເຈົ້າຕ້ອງນໍາເລືອດສ່ວນຫນຶ່ງທີ່ຢູ່ເທິງແທ່ນບູຊາ ແລະ ນໍ້າມັນເຈີມບາງສ່ວນ, ແລະພົມອາໂຣນ ແລະເຄື່ອງແຕ່ງກາຍຂອງລາວ,
ແລະຈົ່ງພົມບັນດາລູກຊາຍຂອງລາວ ແລະເຄື່ອງແຕ່ງກາຍຂອງພວກເຂົາດ້ວຍ. ອາໂຣນຈະຕ້ອງແຍກໄວ້ສໍາລັບເຮົາ,
ເຊັ່ນດຽວກັນໃຫ້ແຍກເຄື່ອງແຕ່ງກາຍຂອງລາວດ້ວຍ, ບັນດາລູກຊາຍຂອງລາວ ແລະເຄື່ອງແຕ່ງກາຍຂອງບັນດາລູກຊາຍຂອງລາວທີ່ຢູ່ກັບລາວ.
22ເຈົ້າຕ້ອງເອົາໄຂມັນຂອງແກະໂຕຜູ້, ຊຶ່ງເປັນໄຂມັນສ່ວນຫາງຫາງ, ໄຂມັນຫຸ້ມເຄື່ອງໃນ, ແລະໄຂມັນຫຸ້ມຕັບ, ໄຕທັງສອງຫນ່ວຍ
ແລະໄຂມັນຫຸ້ມໄຕ, ແລະກົກຂາຂວາ—ເພາະເປັນແກະໂຕຜູ້ທີ່ໃຊ້ເພື່ອການສະຖາປະນາປະໂລຫິດສໍາລັບເຮົາ.23ຈົ່ງນໍາເຂົ້າຈີກ້ອນຫນຶ່ງ
ແລະເຂົ້າຫນົມເຄັກນໍ້າມັນທາຫນຶ່ງແຜ່ນ, ແລະເຂົ້າຈີແຜ່ນບາງຫນຶ່ງແຜ່ນຈາກກະຕ່າ ເຂົ້າຈີເຫລົ່ານີ້ໄຮ້ເຊື້ອແປ້ງ ຊຶ່ງຢູ່ຕໍ່ພຣະພັກພຣະຢາເວ.
24ເຈົ້າຕ້ອງນໍາສິ່ງເຫລົ່ານີ້ໃສ່ໃນມືທັງສອງຂ້າງຂອງອາໂຣນ ແລະມືທັງສອງຂ້າງຂອງບັນດາລູກຊາຍຂອງລາວ
ແລະຖວາຍການໂບກຂອງເຫລົ່ານັ້ນສໍາລັບເຮົາ ເປັນເຄື່ອງຖວາຍໂບກບູຊາ ສະເພາະຕໍ່ພຣະພັກພຣະຢາເວ.
25ເຈົ້າຕ້ອງຮັບອາຫານຈາກມືຂອງພວກເຂົາ ແລະນໍາໄປເຜົາລວມກັບເຄື່ອງເຜົາບູຊາ ເປັນກິ່ນຫອມສໍາລັບເຮົາ;
ເປັນເຄື່ອງບູຊາຖວາຍແດ່ເຮົາດ້ວຍໄຟ.
26ເຈົ້າຕ້ອງເອົາຊີ້ນສ່ວນເອິກຈາກແກະໂຕຜູ້ສໍາລັບຖວາຍຂອງອາໂຣນ ແລະຖວາຍໂບກເປັນເຄື່ອງຖວາຍບູຊາ ຕໍ່ພຣະພັກພຣະຢາເວ,
ແລະມັນຈະເປັນສ່ວນແບ່ງຂອງເຈົ້າ.27ເຈົ້າຕ້ອງເອົາຊີ້ນເອິກຂອງເຄື່ອງຖວາຍໂບກບູຊາທີ່ຖວາຍໂບກແລ້ວ ແຍກອອກໄວ້ສໍາລັບເຮົາ,
ແລະຊີ້ນກົກຂາທີ່ເປັນສ່ວນຂອງປະໂລຫິດ—ທັງສ່ວນເອິກທີ່ຖວາຍໂບກແລ້ວ ແລະ ຊີ້ນກົກຂາຊຶ່ງຈະເປັນສ່ວນແບ່ງຂອງອາໂຣນ
ແລະບັນດາລູກຊາຍຂອງລາວ.28ສິ່ງເຫລົ່ານີ້ຈະເປັນກົດຕະຫລອດໄປສໍາລັບອາໂຣນ ແລະບັນດາລູກຊາຍຂອງລາວ.
ທີ່ຈະໄດ້ຮັບຈາກປະຊາຊົນອິສະຣາເອນ ເພື່ອຖວາຍແດ່ພຣະຢາເວ ຈາກເຄື່ອງຖວາຍສັນຕິບູຊາ.
29ເຄື່ອງແຕ່ງກາຍບໍຣິສຸດຂອງອາໂຣນຕ້ອງສະຫງວນໄວ້ ສໍາລັບບັນດາລູກຊາຍຂອງລາວສືບໄປ. ພວກເຂົາຕ້ອງໄດ້ຮັບການເຈີມ
ແລະສະຖາປະນາໃນພວກເຂົາເພື່ອເຮົາ.30ປະໂລຫິດຜູ້ສືບທອດແທນອາໂຣນຈາກທ່າມກາງບັນດາລູກຊາຍຂອງລາວ,
ຜູ້ຊຶ່ງຈະມາຍັງເຕັນນັດພົບສໍາລັບຮັບໃຊ້ເຮົາໃນສະຖານບໍຣິສຸດ, ຈະຕ້ອງສວມເຄື່ອງແຕ່ງກາຍເຫລົ່ານີ້ເປັນເວລາເຈັດມື້.
31ເຈົ້າຕ້ອງນໍາແກະໂຕຜູ້ສໍາລັບແຕ່ງຕັ້ງບັນດາປະໂລຫິດສໍາລັບເຮົາ ແລະ ເອົາຊີ້ນມາຕົ້ມໃນສະຖານນະມັດສະການ.32ອາໂຣນ ແລະ
ບັນດາລູກຊາຍຂອງລາວ ຕ້ອງກິນຊີ້ນແກະໂຕຜູ້ນັ້ນ ແລະເຂົ້າຈີຊຶ່ງຢູ່ໃນກະຕ່າທີ່ທາງເຂົ້າຫໍເຕັນແຫ່ງຊຸມນຸມ.33ພວກເຂົາຕ້ອງກິນຊີ້ນ
ແລະເຂົ້າຈີທີ່ນໍາມາຖວາຍບູຊາໄຖ່ບາບ ແລະສະຖາປະນາພວກເຂົາ, ເພື່ອແຍກພວກເຂົາອອກມາສໍາລັບເຮົາ. ແຕ່ຄົນອື່ນໆຈະກິນບໍ່ໄດ້,
ເພາະພວກເຂົາຕ້ອງຖືວ່າເປັນສິ່ງທີ່ໄດ້ຖວາຍແກ່ເຮົາແລ້ວ, ໄດ້ສະຫງວນໄວ້ສໍາລັບເຮົາ.34ຖ້າຊີ້ນທີ່ໃຊ້ໃນເຄື່ອງຖວາຍເພື່ອສະຖາປະນາ,
ຫລືເຂົ້າຈີໃດໆນັ້ນຍັງເຫລືອຢູ່ຈົນຮອດຕອນເຊົ້າ, ແລ້ວເຈົ້າຕ້ອງເຜົາມັນ. ຫ້າມກິນເພາະເປັນສິ່ງທີ່ແຍກໄວ້ສໍາລັບເຮົາ.
35ໂດຍວິທີນີ້ແຫລະ, ໃຫ້ເຮັດຕາມທຸກສິ່ງທີ່ເຮົາໄດ້ສັ່ງເຈົ້າໃຫ້ເຮັດ, ເຈົ້າຕ້ອງປະຕິບັດຕໍ່ອາໂຣນ ແລະບັນດາລູກຊາຍຂອງລາວ.
36ເປັນເວລາເຈັດມື້ທີ່ເຈົ້າຈະຕ້ອງຕຽມພວກເຂົາ. ທຸກໆມື້ເຈົ້າຕ້ອງຖວາຍງົວໂຕຜູ້ ມາຖວາຍເປັນເຄື່ອງຖວາຍບູຊາໄຖ່ບາບ.
ເຈົ້າຕ້ອງຊໍາຣະແທ່ນບູຊາໃຫ້ບໍຣິສຸດໂດຍການໄຖ່ບາບໃຫ້ກັບແທ່ນນັ້ນ, ແລະເຈົ້າຕ້ອງເຈີມແທ່ນນັ້ນເພື່ອແຍກໄວ້ສໍາລັບເຮົາ.

[37]ເປັນເວລາເຈັດມື້ເຈົ້າຕ້ອງເຮັດການໄຖ່ບາບໃຫ້ກັບແທ່ນບູຊາ ແລະ ແຍກໄວ້ສຳລັບພຣະຢາເວ. ແລ້ວແທ່ນບູຊາແຍກໄວ້ສຳລັບເຮົາຈະສົມບູນ.
ສິ່ງໃດກໍຕາມທີ່ສຳຜັດກັບແທ່ນນີ້ ກໍຈະຕ້ອງແຍກໄວ້ສຳລັບພຣະຢາເວ.
[38]ເຈົ້າຕ້ອງຖວາຍບູຊາເທິງແທ່ນບູຊາທຸກວັນ ດ້ວຍລູກແກະອາຍຸຫນຶ່ງປີສອງໂຕ.[39]ແກະໂຕຫນຶ່ງເຈົ້າຕ້ອງຖວາຍໃນຕອນເຊົ້າ,
ແລະແກະອີກໂຕຫນຶ່ງເຈົ້າຕ້ອງຖວາຍບູຊາຕອນແລງ.
[40]ພ້ອມກັບລູກແກະໂຕທຳອິດນັ້ນ, ຈົ່ງຖວາຍແປ້ງຢ່າງດີຫນຶ່ງສ່ວນສິບເອຟາ ປົນນໍ້າມັນທີ່ສະກັດໄວ້ຈາກບັນດາຫມາກກອກຫນຶ່ງໃນສີ່ຮິນ,
ແລະເຫລົ້າອາງຸ່ນຫນຶ່ງໃນສີ່ຮິນ ເປັນເຄື່ອງຖວາຍດື່ມບູຊາ.
[41]ເຈົ້າຕ້ອງຖວາຍລູກແກະໂຕທີ່ສອງປະມານກ່ອນຕາເວັນຕົກດິນ. ເຈົ້າຕ້ອງຖວາຍເຄື່ອງຖວາຍເມັດພືດບູຊາ ເຊັ່ນດຽວກັບຕອນເຊົ້າ,
ແລະເຄື່ອງຖວາຍດື່ມບູຊາຄູ່ກັນດ້ວຍ. ໃຫ້ເປັນກິ່ນຫອມສຳລັບເຮົາເປັນເຄື່ອງບູຊາທີ່ເຜົາດ້ວຍໄຟສຳລັບເຮົາ.
[42]ນີ້ຕ້ອງເປັນເຄື່ອງຖວາຍເຜົາບູຊາສະເຫມີໄປຕະຫລອດທຸກຍຸກຂອງເຈົ້າ, ທາງເຂົ້າເຕັນນັດພົບຕໍ່ພຣະພັກພຣະຢາເວ,
ຊຶ່ງເປັນບ່ອນທີ່ເຮົາຈະພົບເຈົ້າທັງຫລາຍ ເພື່ອທີ່ຈະເວົ້າກັບເຈົ້າທີ່ນັ້ນ.
[43]ນັ້ນຄືທີ່ໆເຮົາຈະພົບກັບຊາວອິສະຣາເອນ; ຄືເຕັນຈະແຍກໄວ້ສຳລັບເຮົາດ້ວຍພຣະສະຫງ່າຣາສີຂອງເຮົາ.[44]ເຮົາຈະແຍກຫໍເຕັນແຫ່ງຊຸມນຸມ
ແລະແທ່ນບູຊາໄວ້ສຳລັບເຮົາ. ເຮົາຈະແຍກອາໂຣນແລະບັນດາລູກຊາຍຂອງລາວໄວ້ເປັນປະໂລຫິດເພື່ອຮັບໃຊ້ເຮົາ.
[45]ເຮົາຈະຢູ່ທ່າມກາງຊາວອິສະຣາເອນ ແລະຈະເປັນພຣະເຈົ້າຂອງພວກເຂົາ.[46]ພວກເຂົາຈະໄດ້ຮູ້ວ່າ ເຮົາຄືພຣະຢາເວ,
ເປັນພຣະເຈົ້າຂອງພວກເຂົາ, ຜູ້ໄດ້ນຳພວກເຂົາອອກຈາກແຜ່ນດິນອີຢິບ ເພື່ອວ່າເຮົາຈະໄດ້ຢູ່ທ່າມກາງພວກເຂົາ. ເຮົາຄືພຣະຢາເວ,
ເປັນພຣະເຈົ້າຂອງພວກເຂົາ.

 generated on Tue Jun 17 19:01:42 2025

# 30

1 ເຈົ້າຕ້ອງສ້າງແທ່ນບູຊາສຳລັບເຜົາເຄື່ອງຫອມ. ເຈົ້າຕ້ອງເຮັດແທ່ນນັ້ນດ້ວຍໄມ້ກະຖິນເທດ. 2 ຄວາມຍາວຈະຕ້ອງເປັນຫນຶ່ງສອກ,
ແລະຄວາມກວ້າງຂອງມັນຫນຶ່ງສອກ. ມັນຕ້ອງເປັນຮູບສີ່ຫລ່ຽມຈັດຕຸລັດ, ແລະສູງສອງສອກ, ເຂົາຂອງແທ່ນຕ້ອງເຮັດເປັນເນື້ອດຽວກັນ.

3 ເຈົ້າຕ້ອງຫຸ້ມແທ່ນບູຊາເຄື່ອງຫອມດ້ວຍຄຳບໍຣິສຸດ—ດ້ານເທິງ, ດ້ານຂ້າງ, ເຂົາຂອງແທ່ນ. ເຈົ້າຕ້ອງເຮັດຂອບດ້ວຍທອງຄຳອ້ອມຮອບແທ່ນ.
4 ເຈົ້າຕ້ອງເຮັດຫູທອງຄຳສອງຫູ ຕິດໃຕ້ຂອບທັງສອງດ້ານທີ່ກົງກັນຂວ້າມກັນ. ຫູນັ້ນຈະຕ້ອງເປັນໂຕສຳລັບສອດໄມ້ຄານຫາມແທ່ນບູຊາ.
5 ເຈົ້າຕ້ອງເຮັດໄມ້ຄານຫາມ ຈາກໄມ້ກະຖິນເທດ, ແລະເຈົ້າຕ້ອງຫຸ້ມມັນດ້ວຍທອງຄຳ. 6 ເຈົ້າຕ້ອງຕັ້ງແທ່ນເຜົາເຄື່ອງຫອມນັ້ນໄວ້ຂ້າງຫນ້າຜ້າກັ້ງ
ຊຶ່ງຢູ່ໃກ້ຫີບແຫ່ງພຣະບັນຍັດ. ມັນຕ້ອງຢູ່ຂ້າງຫນ້າຝາຫີບໄຖ່ບາບ ຊຶ່ງຢູ່ເຫນືອຫີບແຫ່ງຄຳພະຍານ, ທີ່ຊຶ່ງເຮົາຈະພົບກັບເຈົ້າ.
7 ອາໂຣນຕ້ອງເຜົາເຄື່ອງຫອມເທິງແທ່ນນັ້ນທຸກໆເຊົ້າ. ລາວຕ້ອງເຜົາເຄື່ອງຫອມນັ້ນ ເມື່ອລາວດູແລຕະກຽງ,
8 ແລະອາໂຣນໃຕ້ຕະກຽງອີກໃນຕອນແລງ ດັ່ງນັ້ນເຄື່ອງຫອມຈະເຜົາເທິງແທ່ນນັ້ນ ຕໍ່ພຣະພັກພຣະຢາເວ,
ສະເຫມີໄປຕະລອດຊົ່ວອາຍຸຄົນຂອງເຈົ້າ. 9 ແຕ່ເຈົ້າຫ້າມນຳເຄື່ອງຫອມອື່ນ, ຫລື ຫ້າມນຳເຄື່ອງເຜົາບູຊາ,
ຫລືເຄື່ອງພືດພັນບູຊາມາເຜົາເທິງແທ່ນບູຊາເຄື່ອງຫອມ. ເຈົ້າຕ້ອງຫ້າມຖອກເຄື່ອງດື່ມບູຊາເທິງແທ່ນນັ້ນ.
10 ອາໂຣນຕ້ອງເຮັດພິທີໄຖ່ບາບເທິງຈອມຂອງແທ່ນປີລະເທື່ອ. ດ້ວຍເລືອດຂອງເຄື່ອງບູຊາລົບລ້າງໄຖ່
ເຂົາຕ້ອງໄຖ່ບາບກັບແທ່ນນັ້ນປີລະເທື່ອຕະຫລອດຊົ່ວຊາດພັນຂອງພວກເຈົ້າ. ແທ່ນນັ້ນຈະແຍກໄວ້ສຳລັບພຣະຢາເວຢ່າງສົມບູນ."
11 ພຣະຢາເວໄດ້ກ່າວກັບໂມເຊວ່າ, 12 "ເມື່ອເຈົ້າຈົດສຳມະໂນຄົວຊາວອິສະຣາເອນ,
ແລ້ວຈຶ່ງໃຫ້ແຕ່ລະຄົນນຳຄ່າໄຖ່ຊີວິດຂອງຕົນມາຖວາຍແດ່ພຣະຢາເວ. ເຈົ້າຕ້ອງເຮັດສິ່ງນີ້ຫລັງຈາກທີ່ເຈົ້ານັບພວກເຂົາ,
ເພື່ອວ່າຈະບໍ່ມີພັຍພິບັດເກີດຂຶ້ນທ່າມກາງພວກເຂົາ ເມື່ອເຈົ້ານັບພວກເຂົາ. 13 ທຸກໆຄົນທີ່ຖືກນັບໃນທະບຽນສຳມະໂນຄົວຈະຕ້ອງຖວາຍດັ່ງນີ້:
ເງິນຫນັກເຄິ່ງເຊເຂ, ຕາມເຊເຂຂອງສະຖານນະມັດສະການ (ເຊເຂຫນຶ່ງເທົ່າກັບຊາວເກຣາ.) ເຄິ່ງເຊເຂຈະເປັນເຄື່ອງຖວາຍແດ່ພຣະຢາເວ.
14 ທຸກໆຄົນທີ່ຖືກນັບ, ຕັ້ງແຕ່ອາຍຸຊາວປີຂຶ້ນໄປ, ເມື່ອປະຊາຊົນນຳສິ່ງຂອງມາຖວາຍບູຊາແກ່ເຮົາ.
15 ເມື່ອປະຊາຊົນຖວາຍເຄື່ອງບູຊານີ້ແດ່ເຮົາ ເພື່ອໄຖ່ບາບສຳລັບຊີວິດຂອງຕົນນັ້ນ, ຄົນຮັ່ງມີຕ້ອງບໍ່ຖວາຍເກີນເຄິ່ງເຊເຂ,
ແລະຄົນຍາກຈົນກໍຕ້ອງບໍ່ຖວາຍນ້ອຍກວ່ານັ້ນ. 16 ເຈົ້າຕ້ອງຮັບເງິນຄ່າໄຖ່ບາບຈາກຊາວອິສະຣາເອນ
ແລະເຈົ້າຕ້ອງຈັດສັນເງິນເພື່ອງານຂອງຫໍເຕັນແຫ່ງຊຸມນຸມ. ຈະຕ້ອງເປັນເຄື່ອງເຕືອນໃຈຂອງຊາວອິສະຣາເອນຕໍ່ຫນ້າເຮົາ,
ເພື່ອຈະໄຖ່ບາບສຳລັບຊີວິດພວກເຈົ້າ."
17 ພຣະຢາເວໄດ້ເວົ້າກັບໂມເຊ ແລະກ່າວວ່າ, 18 "ເຈົ້າຕ້ອງເຮັດອ່າງຂະຫນາດໃຫຍ່ດ້ວຍທອງແດງ ພ້ອມທັງຂາຕັ້ງທອງແດງ,
ເປັນອ່າງສຳລັບຊຳຣະລ້າງ. ເຈົ້າຕ້ອງຕັ້ງອ່າງນັ້ນໄວ້ລະຫວ່າງຫໍເຕັນແຫ່ງຊຸມນຸມ ແລະແທ່ນບູຊາ, ແລະເຈົ້າຕ້ອງເອົານ້ຳໃສ່ອ່າງນັ້ນ.
19 ອາໂຣນແລະບັນດາລູກຊາຍຂອງລາວຕ້ອງລ້າງມື ແລະຕີນຂອງພວກເຂົາດ້ວຍນ້ຳຈາກໃນອ່າງນັ້ນ. 20 ເມື່ອພວກເຂົາເຂົ້າໄປໃນເຕັນແຫ່ງຊຸມນຸມ
ຫລືເມື່ອພວກເຂົາເຂົ້າມາໃກ້ແທ່ນບູຊາ ເພື່ອຮັບໃຊ້ເຮົາດ້ວຍເຄື່ອງເຜົາບູຊາ, ພວກເຂົາຕ້ອງລ້າງດ້ວຍນ້ຳ ເພື່ອວ່າພວກເຂົາຈະບໍ່ຕາຍ.
21 ພວກເຂົາຕ້ອງລ້າງມື ແລະຕີນເພື່ອວ່າພວກເຂົາຈະບໍ່ຕາຍ. ແລະນີ້ຈະເປັນກົດບັນຍັດຕະລອດໄປສຳລັບອາໂຣນ ແລະ
ບັນດາເຊື້ອສາຍຂອງລາວຕະຫລອດຊົ່ວຊາດພັນຂອງພວກເຂົາ."
22 ພຣະຢາເວເວົ້າກັບໂມເຊ ແລະກ່າວວ່າ, 23 "ຈົ່ງເອົາເຄື່ອງເທດຢ່າງດີເຫລົ່ານີ້; ຢາງໄມ້ຫອມນ້ຳຫ້າຮ້ອຍເຊເຂ, ກຳຍານ 250 ເຊເຂ,
ຫົວສີໄຄຫອມ 250 ເຊເຂ, 24 ແລະກາລະບູນຫ້າຮ້ອຍເຊເຂ, ຊັ່ງຕາມນ້ຳຫນັກຂອງເຊເຂັນຂອງສະຖານນະມັດສະການ,
ແລະນ້ຳມັນຫມາກກອກຫນຶ່ງຮິນ. 25 ເຈົ້າຕ້ອງເຮັດນ້ຳມັນເຈີມບໍຣິສຸດດ້ວຍສ່ວນປະສົມເຫລົ່ານີ້, ຕາມວິທີການຂອງຊ່າງປຸງນ້ຳຫອມ.
ຈະເປັນນ້ຳມັນເຈີມບໍຣິສຸດ, ທີ່ສະຫງວນໄວ້ສຳລັບເຮົາ.
26 ເຈົ້າຕ້ອງເຈີມເຕັນນັດພົບ ດ້ວຍນ້ຳມັນນັ້ນ, ລວມທັງຫີບແຫ່ງຄຳພະຍານ, 27 ໂຕະແລະເຄື່ອງໃຊ້ທຸກຢ່າງ,
ຄັນຕະກຽງແລະເຄື່ອງໃຊ້ປະຈຳຄັນຕະກຽງ, ແທ່ນເຜົາເຄື່ອງຫອມ, 28 ແທ່ນບູຊາສຳລັບເຄື່ອງເຜົາບູຊາ ພ້ອມເຄື່ອງໃຊ້ທຸກຢ່າງ,
ແລະອ່າງກັບຖານຮອງ.
29 ເຈົ້າຕ້ອງແຍກສິ່ງເຫລົ່ານີ້ໄວ້ສຳລັບເຮົາ ເພື່ອວ່າມັນຈະບໍຣິສຸດສຳລັບເຮົາ. ສິ່ງໃດໆທີ່ສຳພັດສິ່ງຂອງເຫລົ່ານີ້ ກໍຈະບໍຣິສຸດໄປດ້ວຍ.
30 ເຈົ້າຕ້ອງເຈີມອາໂຣນ ແລະບັນດາລູກຊາຍຂອງລາວ ແລະແຍກພວກເຂົາໄວ້ສຳລັບເຮົາ ເພື່ອພວກເຂົາຈະໄດ້ຮັບໃຊ້ເຮົາໃນຖານະປະໂລຫິດ.
31 ເຈົ້າຕ້ອງແຈ້ງແກ່ຊາວອິສະຣາເອນວ່າ, 'ນີ້ເປັນນ້ຳມັນເຈີມທີ່ແຍກໄວ້ສຳລັບເຮົາຕະຫລອດຊົ່ວຊາດພັນຂອງເຈົ້າ.
32 ຫ້າມໃຊ້ນຳມັນນີ້ກັບຜິວຫນັງຄົນ, ແລະຫ້າມເຮັດນ້ຳອື່ນໃຫ້ມີສ່ວນປະສົມເຫມືອນນ້ຳມັນນີ້, ເພາະນ້ຳມັນນີ້ແຍກໄວ້ສຳລັບພຣະຢາເວ.
ເຈົ້າຕ້ອງຖືຮັກສາລັກສະນະນີ້. 33 ຜູ້ໃດກໍຕາມປະສົມນ້ຳມັນຫອມຢ່າງນີ້, ຫລືຜູ້ໃດກໍຕາມໃຊ້ທາໃສ່ຄົນອື່ນ,
ຜູ້ນັ້ນຈະຖືກຕັດອອກຈາກການເປັນປະຊາຊົນຂອງລາວ.'"
34 ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງເອົາເຄື່ອງເທດ - ກຳຍານ, ຊະມົດ ແລະມາຫາຫິງ, ປະສົມກັບກຳຍານບໍຣິສຸດໃນອັດຕຣາສ່ວນທີ່ເທົ່າກັນ.
35 ຈົ່ງປະສົມຕາມແບບຂອງເຄື່ອງຫອມ, ປະສົມເຫມືອນເຄື່ອງຫອມ, ປຸງດ້ວຍເກືອ, ໃຫ້ບໍຣິສຸດ, ແລະແຍກອອກຕ່າງຫາກ.
36 ເຈົ້າຈະບົດມັນຢ່າງລະອຽດເລີຍ. ວາງໄວ້ຫນ້າຫີບແຫ່ງແຫ່ງພະຍານ, ຊຶ່ງຢູ່ໃນຫໍເຕັນແຫ່ງຊຸມນຸມ, ທີ່ເຮົາຈະມາພົບກັບເຈົ້າ.
ເຈົ້າຕ້ອງຖືວ່າເຄື່ອງຫອມນັ້ນບໍຣິສຸດທີ່ສຸດສຳລັບເຮົາ.
37 ສ່ວນເຄື່ອງຫອມທີ່ເຈົ້າຈະເຮັດນັ້ນ, ເຈົ້າຕ້ອງບໍ່ເຮັດເຫມືອນສ່ວນປະສົມນີ້ເພື່ອໃຊ້ເອງ. ຕ້ອງຖືວ່ານີ້ເປັນຂອງບໍຣິສຸດທີ່ສຸດຕໍ່ເຈົ້າ. 38 ຜູ້ໃດກໍຕາມ
ເຮັດເຄື່ອງຫອມເຊັ່ນນີ້ໄວ້ໃຊ້ເປັນນ້ຳຫອມ ຕ້ອງຖືກຕັດອອກຈາກຄວາມເປັນປະຊາຊົນຂອງເຂົາ."


generated on Tue Jun 17 19:01:42 2025

31 1ພຣະຢາເວກ່າວກັບໂມເຊວ່າ, 2"ເບິ່ງແມ, ເຮົາໄດ້ເລືອກເບຊາເລນລູກຊາຍຂອງອູຣີ ຜູ້ເປັນລູກຊາຍຂອງຮູເຣ, ຈາກເຜົ່າຢູດາ.

3ເຮົາໄດ້ໃຫ້ລາວເຕັມປ່ຽມດ້ວຍວິນຍານຂອງເຮົາ, ໃຫ້ລາວມີສະຕິປັນຍາ, ຄວາມເຂົ້າໃຈ, ແລະຄວາມຮູ້, ໃນວຽກງານຊ່າງທຸກຢ່າງ.
4ເພື່ອຈະຄິດອອກແບບໃນການເຮັດເຄື່ອງຄຳ, ເຄື່ອງເງິນ, ແລະເຄື່ອງທອງແດງ;5ໃນການເຈຍລະໄນ ແລະ ປະກອບພອຍ
ແລະວຽກແກະສະຫລັກໄມ້—ເພື່ອທີ່ຈະເຮັດວຽກງານຊ່າງທຸກຢ່າງ.
6ນອກຈາກລາວແລ້ວ, ເຮົາໄດ້ຕັ້ງໂອໂຮລຽບ ລູກຊາຍຂອງອາຮີສະມັກ, ຈາກເຜົ່າດານ. ເຮົາຍັງໄດ້ໃສ່ທັກສະໃນໃຈຂອງທຸກຄົນທີ່ສະຫລາດ
ເພື່ອວ່າພວກເຂົາຈະເຮັດທຸກຢ່າງທີ່ເຮົາໄດ້ສັ່ງເຈົ້າ. ນີ້ລວມທັງ7ຫໍເຕັນແຫ່ງການຊຸມນຸມ, ຫີບແຫ່ງຄຳພະຍານ, ຝາຫີບໄຖ່ບາບເທິງຫີບ,
ແລະເຄື່ອງໃຊ້ທຸກຢ່າງຂອງເຕັນ—8ໂຕະແລະເຄື່ອງໃຊ້ສຳລັບໂຕະ, ຄັນຕະກຽງບໍຣິສຸດກັບເຄື່ອງໃຊ້ທຸກຢ່າງສຳລັບຄັນຕະກຽງ,
ແທ່ນບູຊາເຜົາເຄື່ອງຫອມ,9ແທ່ນບູຊາສຳລັບເຄື່ອງເຜົາບູຊາລວມທັງເຄື່ອງໃຊ້ທຸກຢ່າງສຳລັບແທ່ນ, ແລະອ່າງຂະໜາດໃຫຍ່ກັບຖານຮອງ.
10ນີ້ລວມທັງເຄື່ອງແຕ່ງກາຍທີ່ຖັກແສ່ວຢ່າງວິຈິດບັນຈົງ— ເຄື່ອງແຕ່ງກາຍນີ້ບໍຣິສຸດສຳລັບອາໂຣນປະໂລຫິດ ແລະ
ເຄື່ອງແຕ່ງກາຍຂອງບັນດາລູກຊາຍຂອງລາວ, ສະຫງວນໄວ້ສຳລັບເຮົາເພື່ອທີ່ພວກເຂົາຈະໄດ້ຮັບໃຊ້ເຮົາໃນຖານະປະໂລຫິດ.
11ນີ້ລວມໄປເຖິງນ້ຳມັນເຈີມ ແລະ ເຄື່ອງຫອມສຳລັບສະຖານະມັດສະການ. ພວກຊ່າງເຫລົ່ານີ້ຕ້ອງເຮັດສິ່ງເຫລົ່ານີ້ທັງຫມົດທີ່ເຮົາໄດ້ຊົງສັ່ງເຈົ້າ.
12ພຣະຢາເວເວົ້າກັບໂມເຊ ແລະກ່າວວ່າ, 13"ຈົ່ງສັ່ງຊາວອິສະຣາເອນວ່າ: 'ເຈົ້າຕ້ອງຮັກສາວັນສະບາໂຕຂອງພຣະຢາເວໄວ້ຢ່າງເຄັ່ງຄັດ,
ເພາະນີ້ຈະເປັນຫມາຍສຳຄັນລະຫວ່າງພຣະອົງ ແລະ ພວກເຈົ້າຕະຫລອດຊົ່ວຊາດພັນຂອງພວກເຈົ້າ ເພື່ອເຈົ້າຈະຮູ້ວ່າພຣະອົງເປັນພຣະຢາເວ,
ຜູ້ໄດ້ແຍກພວກເຈົ້າໄວ້ສຳລັບພຣະອົງ. 14ດັ່ງນັ້ນ ພວກເຈົ້າຕ້ອງຮັກສາວັນສະບາໂຕ, ເພື່ອຈະເປັນວັນບໍຣິສຸດສຳລັບພວກເຈົ້າ,
ສະຫງວນໄວ້ສຳລັບພຣະອົງ. ຜູ້ໃດເຮັດໃຫ້ວັນນັ້ນເປັນມົນທິນຈະຕ້ອງຕາຍຢ່າງແນ່ນອນ. ຜູ້ໃດກໍຕາມທີ່ເຮັດວຽກໃນວັນສະບາໂຕ,
ຜູ້ນັ້ນຈະຖືກຕັດອອກຈາກການປະຊາຊົນຂອງລາວ. 15ຈົ່ງເຮັດວຽກຫົກວັນ, ແຕ່ໃນມື້ທີເຈັດເປັນວັນສະບາໂຕສຳລັບຢຸດພັກຜ່ອນທັງຫມົດ,
ເປັນວັນບໍຣິສຸດ, ທີ່ສະຫງວນໄວ້ເພື່ອພຣະກຽດຂອງພຣະຢາເວ. ຜູ້ໃດກໍຕາມທີ່ເຮັດວຽກໃນວັນສະບາໂຕ ຕ້ອງເຖິງຄວາມຕາຍຢ່າງແນ່ນອນ.
16ດັ່ງນັ້ນ ຊາວອິສະຣາເອນຕ້ອງຮັກສາວັນສະບາໂຕ. ພວກເຂົາຕ້ອງຍຶດຖືຕະຫລອດຊົ່ວຊາດພັນຂອງພວກເຂົາ ເປັນກົດຖາວອນຕະຫລອດໄປ.
17ສະບາໂຕຈະເປັນຫມາຍສຳຄັນລະຫວ່າງພຣະຢາເວ ແລະ ຊາວອິສະຣາເອນສະເຫມີໄປ, ເພາະໃນຫົກວັນພຣະຢາເວໄດ້ສ້າງຟ້າສະຫວັນ
ແລະ ແຜ່ນດິນໂລກ, ແລະແຕ່ໃນວັນທີເຈັດຊົງຢຸດພັກຜ່ອນ, ແລະຢ່ອນພຣະທັຍ.'"
18ເມື່ອພຣະເຈົ້າໄດ້ເວົ້າກັບໂມເຊເທິງພູຊີນາຍສຳເລັດແລ້ວ, ພຣະອົງຈຶ່ງປຣະທານແຜ່ນພຣະບັນຍັດສອງແຜ່ນ, ເຮັດຈາກຫີນ,
ຈາຮຶກດ້ວຍມືຂອງພຣະເຈົ້າເອງ.


generated on Tue Jun 17 19:01:42 2025

32 1ເມື່ອປະຊາຊົນເຫັນວ່າໂມເຊຍັງຊ້າ ບໍ່ລົງມາຈາກພູເທື່ອ, ພວກເຂົາຈຶ່ງລວມຕົວອ້ອມຮອບອາໂຣນ ແລະກ່າວກັບລາວວ່າ, "ມາເຖີດ,
ຈົ່ງສ້າງຮູບເຄົາຣົບໃຫ້ພວກເຮົາ ຊຶ່ງຈະນຳຫນ້າພວກເຮົາໄປ. ເພາະວ່າໂມເຊຄົນນີ້ແຫລະ,
ເປັນຊາຍຄົນທີ່ໄດ້ນຳພວກເຮົາອອກມາຈາກແຜ່ນດິນອີຢິບ,
ພວກເຮົາບໍ່ຮູ້ວ່າມີຫຍັງເກີດຂຶ້ນກັບລາວແລ້ວ."2ດັ່ງນັ້ນອາໂຣນຈຶ່ງໄດ້ກ່າວກັບພວກເຂົາວ່າ, "ຈົ່ງຖອດບັນດາຕຸ້ມຫູທອງຄຳຈາກບັນດາເມຍ ແລະ
ຫູຂອງບັນດາລູກຊາຍ ແລະຈາກບັນດາລູກສາວ, ແລະນຳມາໃຫ້ເຮົາເຖີດ."

3ປະຊາຊົນທັງຫມົດຈຶ່ງຖອດຕຸ້ມຫູຄຳຈາກຫູຂອງພວກເຂົາ ແລະ ໄດ້ນຳມາມອບໃຫ້ແກ່ອາໂຣນ.4ເມື່ອອາໂຣນໄດ້ຮັບຄຳຈາກພວກເຂົາແລ້ວ,
ຈຶ່ງໃຊ້ເຄື່ອງມືຫລໍ່, ແລະໄດ້ຫລໍ່ເປັນຮູບລູກງົວໂຕຫນຶ່ງ. ແລ້ວປະຊາຊົນໄດ້ເວົ້າວ່າ, "ອິສະຣາເອນເອີຍ, ສິ່ງນີ້ແຫລະເປັນພະຂອງເຈົ້າ
ຊຶ່ງໄດ້ນຳເຈົ້າອອກມາຈາກແຜ່ນດິນອີຢິບ."
5ເມື່ອອາໂຣນເຫັນດັ່ງນັ້ນແລ້ວ, ລາວຈຶ່ງໄດ້ສ້າງແທ່ນບູຊາໄວ້ຕໍ່ຫນ້າຮູບລູກງົວນັ້ນ ແລະລາວໄດ້ປະກາດວ່າ:
"ມື້ອື່ນຈະເປັນງານລ້ຽງຖວາຍພຣະກຽດແດ່ພຣະຢາເວ."6ປະຊາຊົນກໍລຸກຂຶ້ນແຕ່ເຊົ້າໃນມື້ຕໍ່ມາ ແລະ ໄດ້ຖວາຍບັນດາເຄື່ອງເຜົາບູຊາ
ແລະໄດ້ນຳບັນດາເຄື່ອງບູຊາເພື່ອຄວາມສາມັກຄີທັມມາ. ແລ້ວປະຊາຊົນກໍໄດ້ນັ່ງລົງກິນ ແລະດື່ມ,
ແລະແລ້ວກໍໄດ້ລຸກຂຶ້ນມ່ວນຊື່ນໃນງານລ້ຽງຢ່າງເມົາມາຍ.
7ແລ້ວພຣະຢາເວໄດ້ກ່າວກັບໂມເຊວ່າ, "ຈົ່ງຮີບໄປໄວໆ, ເພາະວ່າປະຊາຊົນຂອງເຈົ້າ, ຊຶ່ງເຈົ້າໄດ້ນຳອອກມາຈາກແຜ່ນດິນອີຢິບນັ້ນ,
ໄດ້ເຮັດເລື່ອງເສື່ອມເສຍ.8ພວກເຂົາໄດ້ຫັນຈາກທາງ ຊຶ່ງເຮົາໄດ້ສັ່ງພວກເຂົາໄວ້ນັ້ນຢ່າງໄວວາ.
ພວກເຂົາໄດ້ຫລໍ່ຮູບລູກງົວຂຶ້ນສຳລັບພວກເຂົາເອງ ແລະໄດ້ນະມັດສະການ ແລະໄດ້ຖວາຍບູຊາແກ່ຮູບນັ້ນ. ພວກເຂົາໄດ້ກ່າວວ່າ, 'ໂອ
ອິສະຣາເອນເອີຍ, ສິ່ງນີ້ແຫລະເປັນພະເຈົ້າຂອງພວກເຮົາ ຊຶ່ງໄດ້ນຳພວກເຈົ້າອອກມາຈາກແຜ່ນດິນອີຢິບ."
9ແລ້ວພຣະຢາເວກ່າວກັບໂມເຊວ່າ,10"ເຮົາໄດ້ເຫັນຊົນຊາດນີ້ແລ້ວ. ເບິ່ງແມ, ພວກເຂົາເປັນຊົນຊາດທີ່ຫົວດື້. ບັດນີ້ ຈົ່ງຢ່າພະຍາຍາມຫ້າມເຮົາ.
ເພື່ອຄວາມໂກດຮ້າຍຂອງເຮົາຈະເຜົາໄຫມ້ພວກເຂົາ, ດັ່ງນັ້ນເຮົາຈະທຳລາຍພວກເຂົາເສຍ.
ແລ້ວເຮົາຈະສ້າງຊົນຊາດໃຫຍ່ຈາກເຈົ້າ."11ແຕ່ໂມເຊພະຍາຍາມຂໍໃຫ້ພຣະອົງບັນເທົາຄວາມໂກດຮ້າຍຂອງພຣະຢາເວ ລາວໄດ້ກ່າວວ່າ,
"ຂ້າແດ່ພຣະຢາເວ, ເປັນຫຍັງພຣະອົງຈຶ່ງຊົງໂກດຮ້າຍຕໍ່ປະຊາຊົນຂອງພຣະອົງ,
ຊຶ່ງພຣະອົງໄດ້ນຳອອກຈາກແຜ່ນດິນອີຢິບດ້ວຍຣິດອຳນາດອັນຫຍິ່ງໃຫຍ່ ແລະດ້ວຍພຣະຫັດອັນຊົງຣິດຫລື?
12ເປັນຫຍັງຈະໃຫ້ຄົນອີຢິບກ່າວວ່າ, 'ພຣະອົງນຳພວກເຂົາອອກມາເພື່ອຈະທຳຮ້າຍພວກເຂົາ, ເພື່ອຈະປະຫານພວກເຂົາເທິງພູນີ້
ແລະທຳລາຍພວກເຂົາເສຍຈາກແຜ່ນດິນໂລກ?' ຂໍພຣະອົງຫັນກັບຈາກຄວາມໂກດຮ້າຍອັນແຮງກ້າ ແລະ
ຂໍປ່ຽນໃຈຢ່າລົງໂທດປະຊາຊົນຂອງພຣະອົງເຊັ່ນນີ້ເລີຍ.13ຂໍໂຜດລະນຶກເຖິງ ອັບຣາຮາມ ແລະ ອີຊາກ ແລະອິສະຣາເອນ,
ຜູ້ຮັບໃຊ້ຂອງພຣະອົງ, ພຣະອົງເອງໄດ້ໃຫ້ຄຳປະຕິຍານດ້ວຍພຣະນາມຂອງພຣະອົງເອງ ແລະກ່າວກັບພວກເພິ່ນວ່າ,
'ເຮົາຈະໃຫ້ເຊື້ອສາຍຂອງພວກເຈົ້າຢ່າງຫລວງຫລາຍ ເຫມືອນດັ່ງດວງດາວໃນຟ້າສະຫວັນ,
ແລະເຮົາຈະຍົກແຜ່ນດິນນີ້ທັງຫມົດທີ່ເຮົາສັນຍາໃຫ້ແກ່ ເຊື້ອສາຍຂອງພວກເຈົ້າ
ພວກເຂົາຈະໄດ້ຮັບເປັນມໍຣະດົກຕະຫລອດໄປ.'"14ແລ້ວພຣະຢາເວຈຶ່ງປ່ຽນພຣະທັຍ
ບໍ່ຊົງລົງໂທດຕາມທີ່ພຣະອົງໄດ້ກ່າວໄວ້ແກ່ປະຊາຊົນຂອງພຣະອົງ.
15ແລ້ວໂມເຊກໍໄດ້ກັບລົງມາຈາກພູ, ຖືແຜ່ນພຣະບັນຍັດສອງແຜ່ນໃນມືຂອງລາວ, ບັນດາແຜ່ນຫີນນັ້ນໄດ້ຈາຣຶກທັງສອງດ້ານ, ທັງດ້ານຫນ້າ
ແລະ ດ້ານຫລັງ.16ແຜ່ນຫີນທັງສອງແຜ່ນເປັນສິ່ພຣະຫັດຂອງພຣະເຈົ້າເອງ, ແລະເປັນລາຍພຣະຫັດຂອງພຣະເຈົ້າເອງ,
ໄດ້ສະຫລັກໄວ້ເທິງແຜ່ນຫີນນັ້ນ.
17ເມື່ອໂຢຊວຍໄດ້ຍິນສຽງປະຊາຊົນຮ້ອງໃສ່ກັນຢູ່, ລາວຈຶ່ງເວົ້າກັບໂມເຊວ່າ,
"ມີສຽງດັ່ງເຫມືອນກຳລັງສູ້ຮົບກັນຢູ່ໃນຄ້າຍ"18ແຕ່ໂມເຊໄດ້ຕອບວ່າ, "ນັ້ນບໍ່ແມ່ນສຽງຮ້ອງຂອງຜູ້ຊະນະ, ແລະ
ບໍ່ແມ່ນສຽງຮ້ອງຂອງຜູ້ປະຣາຊັຍ, ແຕ່ເປັນສຽງຮ້ອງລຳທຳເພງທີ່ເຮົາໄດ້ຍິນ."
19ເມື່ອໂມເຊເຂົ້າມາໃກ້ຄ້າຍ, ລາວໄດ້ເຫັນລູກງົວ ແລະປະຊາຊົນກຳລັງເຕັ້ນລຳ. ລາວກໍໃຈຮ້າຍສຸດໆ. ລາວໄດ້ຖິ້ມແຜ່ນຫີນຈາກມືຂອງລາວ
ແລະເຮັດໃຫ້ມັນແຕກເສຍທີ່ຕີນພູ.20ລາວໄດ້ເອົາລູກງົວທີ່ປະຊາຊົນເຮັດໄວ້, ເຜົາເສຍ, ບົດເປັນຜົງ, ແລະໂຮຍລົງໃນນ້ຳ.
ແລ້ວລາວໄດ້ໃຫ້ປະຊາຊົນອິສະຣາເອນດື່ມ.
21ແລ້ວໂມເຊກ່າວກັບອາໂຣນວ່າ, "ປະຊາຊົນນີ້ເຮັດຫຍັງໃຫ້ແກ່ເຈົ້າ, ເຈົ້າຈຶ່ງນຳບາບໃຫຍ່ນີ້ມາສູ່ພວກເຂົາ?"22ອາໂຣນຕອບວ່າ,
"ຢ່າໃຫ້ຄວາມໂກດຮ້າຍຂອງທ່ານເຜົາໄຫມ້ຂຶ້ນເລີຍ, ເຈົ້ານາຍຂອງຂ້ານ້ອຍ. ທ່ານກໍຮູ້ວ່າປະຊາຊົນພວກນີ້, ພວກເຂົາຮູ້ວິທີທີ່ຈະເຮັດຊົ່ວ.
23ພວກເຂົາໄດ້ມາບອກຂ້ານ້ອຍວ່າ, 'ຂໍສ້າງພະໃຫ້ເຮົາຊຶ່ງຈະນຳຫນ້າເຮົາ. ດ້ວຍວ່າໂມເຊ, ຄົນນີ້ທີ່ໄດ້ນຳເຮົາອອກຈາກແຜ່ນດິນອີຢິບນັ້ນ,
ພວກເຮົາບໍ່ຮູ້ວ່າມີຫຍັງເກີດຂຶ້ນກັບລາວແລ້ວ.'24ດັ່ງນັ້ນ ຂ້ານ້ອຍໄດ້ຕອບພວກເຂົາວ່າ, 'ໃຜມີຄຳ, ໃຫ້ປົດອອກມາ.'
ພວກເຂົາກໍມອບຄຳໃຫ້ຂ້ານ້ອຍ ແລະຂ້ານ້ອຍກໍໄດ້ໂຍນລົງໄປໃນໄຟ ແລະຜົນກໍຄືລູກງົວນີ້."
25ໂມເຊເຫັນປະຊາຊົນບໍ່ສາມາດຄວບຄຸມໄດ້ (ເພາະອາໂຣນໄດ້ປ່ອຍພວກເຂົາທັງຫລາຍຈົນບໍ່ສາມາດຄວບຄຸມໄດ້,
ເປັນເຫດໃຫ້ພວກເຂົາຖືກພວກສັດຕຣູຂອງພວກເຂົາເຢາະເຢີ້ຍ).26ແລ້ວໂມເຊຢືນຢູ່ທີ່ປະຕູຄ້າຍ ແລະເວົ້າວ່າ, "ຜູ້ໃດເປັນຝ່າຍພຣະຢາເວ,
ຈົ່ງມາຫາເຮົາເຖີດ." ຄົນເລວີທັງຫມົດກໍໄດ້ມາຫາລາວພ້ອມກັນ.27ໂມເຊຈຶ່ງກ່າວກັບພວກເຂົາວ່າ, "ພຣະຢາເວ ພຣະເຈົ້າຂອງອິສະຣາເອນ,
ກ່າວດັ່ງນີ້ວ່າ: 'ແຕ່ລະຄົນ ຈົ່ງຖືດາບແນບກາຍ ແລະໄປມາຕາມປະຕູຄ້າຍບ່ອນຫນຶ່ງ ໄປອີກບ່ອນຫນຶ່ງຮອບຄ້າຍ,
ແລະຂ້າທຸກຄົນແມ້ເປັນພີ່ນ້ອງ, ມິດສະຫາຍ, ແລະເພື່ອນບ້ານຂອງເຂົາເອງກໍຕາມ.'"
28ຄົນເລວີກໍເຮັດຕາມທີ່ໂມເຊໄດ້ສັ່ງ. ໃນມື້ນັ້ນປະຊາຊົນປະມານສາມພັນຄົນໄດ້ຕາຍລົງ.29ໂມເຊໄດ້ກ່າວກັບຄົນເລວີ,
"ໃນມື້ນີ້ທ່ານທັງຫລາຍຈົ່ງສະຖາປະນາຕົນເອງຮັບໃຊ້ພຣະຢາເວ, ແຕ່ລະຄົນຈົ່ງສູ້ຮົບກັບລຸກຊາຍ ແລະອ້າຍນ້ອງຂອງຕົນ,
ເພື່ອວ່າພຣະຢາເວຈະໄດ້ອວຍພອນທ່ານທັງຫລາຍມື້ນີ້."

[30]ມື້ຕໍ່ມາໂມເຊກ່າວແກ່ປະຊາຊົນວ່າ, "ເຈົ້າທັງຫລາຍໄດ້ເຮັດບາບທີ່ຫຍິ່ງໃຫຍ່. ບັດນີ້ເຮົາຈະຂຶ້ນໄປຫາພຣະຢາເວ.
ບາງທີເຮົາຈະສາມາດຂໍໄຖ່ບາບຂອງພວກເຈົ້າ."[31]ໂມເຊຈຶ່ງກັບໄປຫາພຣະຢາເວ ແລະກ່າວວ່າ, "ໂອ ປະຊາຊົນເຫລົ່ານີ້ໄດ້ເຮັດບາບໃຫຍ່ຫລວງ
ແລະພວກເຂົາສ້າງຮູບເຄົາຣົບຄຳສຳລັບຕົນເອງ.[32]ແຕ່ບັດນີ້, ຂໍພຣະອົງໂຜດຍົກໂທດບາບຂອງພວກເຂົາດ້ວຍ; ແຕ່ຖ້າພຣະອົງບໍ່ເຮັດດັ່ງນັ້ນ,
ໂຜດລົບຊື່ຂອງຂ້ານ້ອຍເສຍຈາກປຶ້ມທີ່ພຣະອົງໄດ້ຈົດໄວ້ນັ້ນ."
[33]ພຣະຢາເວກ່າວກັບໂມເຊວ່າ, "ຜູ້ໃດໄດ້ເຮັດບາບຕໍ່ເຮົາ, ເຮົາກໍຈະລົບຊື່ຜູ້ນັ້ນຈາກທະບຽນຂອງເຮົາ.[34]ບັດນີ້ຈົ່ງໄປ,
ນຳປະຊາຊົນໄປຍັງທີ່ຊຶ່ງເຮົາໄດ້ບອກແກ່ເຈົ້າແລ້ວ. ເບິ່ງແມ, ເທວະດາຂອງເຮົາຈະນຳຫນ້າພວກເຈົ້າໄປ. ແຕ່ວ່າມື້ທີ່ເຮົາຈະລົງໂທດນັ້ນ,
ເຮົາຈະລົງໂທດພວກເຂົາ ເພາະບາບຂອງພວກເຂົາ."[35]ແລ້ວພຣະຢາເວບັນດານໃຫ້ເກີດພັຍພິບັດກັບປະຊາຊົນ ເພາະພວກເຂົາໄດ້ເຮັດລູກງົວ,
ຊຶ່ງອາໂຣນໄດ້ເຮັດນັ້ນ.

33 [1]ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງໄປຈາກທີ່ນີ້, ເຈົ້າ ແລະປະຊາຊົນຜູ້ຊຶ່ງເຈົ້າໄດ້ນຳອອກມາຈາກແຜ່ນດິນອີຢິບ.
ໄປຍັງແຜ່ນດິນຊຶ່ງເຮົາໄດ້ສັນຍາກັບອັບຣາຮາມ, ອີຊາກ, ແລະຢາໂຄບ, ເມື່ອເຮົາໄດ້ເວົ້າວ່າ,
'ເຮົາຈະໃຫ້ແຜ່ນດິນນັ້ນແກ່ເຊື້ອສາຍຂອງພວກເຈົ້າ.'[2]ເຮົາຈະໃຊ້ເທວະດາອົງຫນຶ່ງນຳຫນ້າພວກເຈົ້າໄປ, ແລະເຮົາຈະຂັບໄລ່ຊາວການາອານ,
ຊາວອະໂມຣິດ, ຊາວຮິດຕີ, ຊາວເປຣີຊີ, ຊາວຮີວີ, ແລະຊາວເຢບຸດ ອອກໄປເສຍ.[3]ຈົ່ງຂຶ້ນໄປຍັງແຜ່ນດິນ, ຊຶ່ງມີນ້ຳນົມ ແລະນ້ຳເຜິ້ງໄຫລ,
ແຕ່ເຮົາຈະບໍ່ໄປກັບເຈົ້າ, ເພາະວ່າພວກເຈົ້າເປັນປະຊາຊົນທີ່ຫົວແຂງ, ຢ້ານວ່າເຮົາຈະທຳລາຍພວກເຈົ້າເສຍກາງທາງ."

[4]ເມື່ອປະຊາຊົນໄດ້ຍິນຂ່າວຮ້າຍນີ້, ພວກເຂົາກໍເປັນທຸກຫລາຍ, ແລະບໍ່ມີໃຜສວມໃສ່ເຄື່ອງປະດັບເລີຍ.[5]ພຣະຢາເວໄດ້ກ່າວກັບໂມເຊວ່າ,
"ຈົ່ງກ່າວແກ່ປະຊາຊົນວ່າ, 'ເຈົ້າທັງຫລາຍເປັນຊົນຊາດທີ່ຫົວແຂງ. ຖ້າເຮົາໄປກັບພວກເຈົ້າບຶດຫນຶ່ງ, ເຮົາກໍຈະທຳລາຍລ້າງພວກເຈົ້າເສຍ.
ບັດນີ້, ຈົ່ງຖອດເຄື່ອງປະດັບອອກເສຍ ເພື່ອເຮົາຈະຕັດສິນໃຈວ່າຈະເຮັດຢ່າງໃດກັບພວກເຈົ້າ.'"[6]ດັ່ງນັ້ນຊາວອິສະຣາເອນ
ຈຶ່ງບໍ່ໄດ້ສວມໃສ່ເຄື່ອງປະດັບ ຕັ້ງແຕ່ຕອນທີ່ຢູ່ເຂດພູໂຮເຣັບເປັນຕົ້ນມາ.
[7]ໂມເຊຕັ້ງເຕັນຫລັງຫນຶ່ງໄວ້ ແລະ ວາງໄວ້ນອກຈາກຄ້າຍໄກພໍສົມຄວນຈາກຄ້າຍ. ລາວເອີ້ນວ່າຫໍເຕັນແຫ່ງການຊຸມນຸມ.
ທຸກໆຄົນທີ່ໄດ້ຖາມພຣະຢາເວເລື່ອງໃດໆ ກໍຈະອອກໄປຍັງຫໍເຕັນແຫ່ງການຊຸມນຸມ ຊຶ່ງຕັ້ງຢູ່ນອກຄ້າຍ.
[8]ເມື່ອໃດກໍຕາມທີ່ໂມເຊອອກໄປຍັງຫໍເຕັນນັ້ນ, ປະຊາຊົນທັງຫມົດກໍລຸກຂຶ້ນຢືນຢູ່ ທີ່ທາງເຂົ້າຫໍເຕັນຂອງຕົນ
ແລະເບິ່ງໂມເຊຈົນກວ່າລາວເຂົ້າໄປຂ້າງໃນ.[9]ເມື່ອໃດກໍຕາມທີ່ໂມເຊເຂົ້າໄປໃນຫໍເຕັນແລ້ວ,
ເສົາເມກຈະໄດ້ລອຍລົງມາຕັ້ງຢູ່ທີ່ປະຕູທາງເຂົ້າຫໍເຕັນ, ແລະພຣະຢາເວກໍກ່າວກັບໂມເຊ.
[10]ເມື່ອໃດກໍຕາມ ທີ່ປະຊາຊົນທັງຫມົດໄດ້ເຫັນເສົາເມກຕັ້ງຢູ່ທີ່ທາງເຂົ້າຫໍເຕັນ, ພວກເຂົາທຸກຄົນກໍຈະໄດ້ລຸກຂຶ້ນ
ແລະທຸກຄົນນະມັດສະການຢູ່ທາງເຂົ້າຫໍເຕັນຂອງຕົນ.[11]ພຣະຢາເວຈະໄດ້ກ່າວກັບໂມເຊຫນ້າຕໍ່ຫນ້າ,
ເຫມືອນຄົນໆຫນຶ່ງລົມກັບເພື່ອນຂອງລາວ. ແລ້ວໂມເຊກໍໄດ້ກັບໄປຍັງຄ້າຍ, ແຕ່ຜູ້ຮັບໃຊ້ຂອງລາວຄື ໂຢຊວຍລູກຊາຍຂອງນູນ,
ຊຶ່ງເປັນຊາຍຫນຸ່ມ, ຍັງຄົງຢູ່ໃນເຕັນ.
[12]ໂມເຊກ່າວກັບພຣະຢາເວວ່າ, "ເບິ່ງແມ, ພຣະອົງໄດ້ສັ່ງຂ້ານ້ອຍວ່າ, 'ຈົ່ງນຳປະຊາຊົນນີ້ຂຶ້ນໄປ,' ແຕ່ພຣະອົງບໍ່ໄດ້ແຈ້ງໃຫ້ຂ້ານ້ອຍຮູ້ວ່າ
ຈະໃຊ້ໃຜຂຶ້ນໄປກັບຂ້ານ້ອຍ. ພຣະອົງຍັງໄດ້ກ່າວວ່າ, 'ເຮົາຮູ້ຈັກຊື່ຂອງເຈົ້າ, ແລະເຈົ້າຍັງເປັນທີ່ພໍໃຈໃນສາຍຕາຂອງເຮົາດ້ວຍ.'[13]ບັດນີ້
ຖ້າຂ້ານ້ອຍໄດ້ເປັນທີ່ພໍໃຈໃນພຣະເນດຂອງພຣະອົງແລ້ວ, ຂໍໂຜດສຳແດງທາງຂອງພຣະອົງແກ່ຂ້ານ້ອຍ ເພື່ອວ່າຂ້ານ້ອຍຈະຮູ້ຈັກພຣະອົງ
ແລະຂ້ານ້ອຍຈະຍັງເປັນທີ່ພໍໃຈໃນພຣະເນດຂອງພຣະອົງ. ໂຜດຈື່ຈຳວ່າຊົນຊາດນີ້ເປັນປະຊາຊົນຂອງພຣະອົງ."
[14]ພຣະຢາເວໄດ້ກ່າວວ່າ, "ເຮົາເອງຈະໄປກັບເຈົ້າ, ແລະເຮົາຈະໃຫ້ເຈົ້າໄດ້ເບົາໃຈ."[15]ແລ້ວໂມເຊຈຶ່ງກ່າວກັບພຣະອົງວ່າ, "ຖ້າພຣະອົງເອງບໍ່
ສະເດັດໄປກັບພວກຂ້ານ້ອຍ, ກໍຢ່ານຳພວກຂ້ານ້ອຍຂຶ້ນໄປຈາກທີ່ນີ້ເລີຍ.[16]ຖ້າບໍ່ເປັນດັ່ງນັ້ນແລ້ວ, ຈະຮູ້ໄດ້ຢ່າງໃດວ່າ ຂ້ານ້ອຍ
ແລະປະຊາຊົນຂອງພຣະອົງໄດ້ເປັນທີ່ພໍໃຈໃນພຣະເນດຂອງພຣະອົງແລ້ວ? ນອກຈາກພຣະອົງຈະສະເດັດໄປກັບພວກຂ້ານ້ອຍດ້ວຍບໍ່ແມ່ນບໍ?
ເພື່ອວ່າຂ້ານ້ອຍ ແລະປະຊາຊົນຂອງພຣະອົງ ຈຶ່ງແຕກຕ່າງຈາກຊົນຊາດອື່ນທົ່ວແຜ່ນດິນໂລກບໍ?"
[17]ພຣະຢາເວກ່າວກັບໂມເຊວ່າ, "ສິ່ງທີ່ເຈົ້າຂໍນັ້ນ ເຮົາຈະເຮັດໃຫ້, ເພາະເຈົ້າເປັນທີ່ພໍໃຈໃນສາຍຕາຂອງເຮົາແລ້ວ,
ແລະເຮົາຮູ້ຈັກຊື່ຂອງເຈົ້າ."[18]ໂມເຊກ່າວວ່າ, "ຂໍໂຜດສະແດງພຣະສະຫງ່າຣາສີຂອງພຣະອົງແກ່ຂ້ານ້ອຍເຖີດ."
[19]ພຣະຢາເວຈຶ່ງກ່າວວ່າ, "ເຮົາຈະໃຫ້ຄວາມດີທັງຫມົດຂອງເຮົາປາກົດແຈ້ງຕໍ່ຫນ້າເຈົ້າ, ແລະເຮົາຈະປະກາດນາມຂອງ 'ພຣະຢາເວ'
ຕໍ່ຫນ້າເຈົ້າ. ເຮົາຈະພໍໃຈຜູ້ໃດ ກໍຈະພໍໃຈຜູ້ນັ້ນ, ແລະເຮົາຈະເມດຕາຜູ້ໃດ ເຮົາກໍຈະເມດຕາຜູ້ນັ້ນ."[20]ແຕ່ພຣະຢາເວກ່າວວ່າ,
"ເຈົ້າຈະເຫັນຫນ້າເຮົາບໍ່ໄດ້, ເພາະບໍ່ມີຜູ້ໃດເຫັນຫນ້າເຮົາ ແລະຍັງມີຊີວິດຢູ່ໄດ້."
[21]ພຣະຢາເວກ່າວວ່າ, "ເບິ່ງແມ, ມີທີ່ແຫ່ງຫນຶ່ງຢູ່ໃກ້ເຮົາ; ເຈົ້າຈະໄປຢືນຢູ່ເທິງຫີນ.[22]ຂະນະເມື່ອພຣະສະຫງ່າຣາສີຂອງເຮົາໄດ້ຜ່ານໄປ,
ເຮົາຈະເຊື່ອງເຈົ້າໄວ້ໃນຊອກຫີນ ແລະ ຈະບັງເຈົ້າໄວ້ດ້ວຍມືເຮົາຈົນກວ່າເຮົາໄດ້ຜ່ານໄປ.[23]ແລ້ວເຮົາຈະເອົາມືຂອງເຮົາອອກໄປ,
ແລະເຈົ້າຈະເຫັນຫລັງຂອງເຮົາ, ແຕ່ຫນ້າຂອງເຮົາເຈົ້າຈະບໍ່ໄດ້ເຫັນ."


generated on Tue Jun 17 19:01:42 2025

34 1ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງຕັດຫີນສອງແຜ່ນໃຫ້ເຫມືອນດັ່ງຄັ້ງທໍາອິດນັ້ນ. ເຮົາຈະຈາຣຶກເທິງແຜ່ນຫີນເຫລົ່ານັ້ນ
ດ້ວຍຖ້ອຍຄໍາທີ່ໄດ້ຢູ່ໃນຫີນຊຸດທໍາອິດ, ຊຶ່ງເຈົ້າໄດ້ເຮັດແຕກນັ້ນ.2ຈົ່ງຕຽມໃຫ້ພ້ອມໃນຕອນເຊົ້າ ແລະ ຂຶ້ນມາຍັງພູຊີນາຍ,
ແລະເຈົ້າເອງຈົ່ງມາພົບເຮົາທີ່ນັ້ນເທິງຍອດພູ.

3ຢ່າໃຫ້ຜູ້ໃດໄດ້ມາປາກົດຕົວທີ່ໃດເທິງພູກັບເຈົ້າ. ຢ່າໃຫ້ຝູງສັດ ຫລືເຫລົ່າສັດ
ແມ້ແຕ່ມາກິນຫຍ້າຢູ່ຫນ້າພູນີ້ກໍບໍ່ໄດ້."4ດັ່ງນັ້ນໂມເຊຈຶ່ງຕັດຫີນສອງແຜ່ນເຫມືອນຊຸດທໍາອິດ, ແລະລາວກໍໄດ້ຕື່ນແຕ່ເຊົ້າ
ແລະໄດ້ຂຶ້ນໄປເທິງພູຊີນາຍ, ຕາມພຣະຄໍາສັ່ງຂອງພຣະຢາເວທີ່ໄດ້ຊົງສັ່ງລາວ. ໂມເຊໄດ້ຖືຫີນສອງແຜ່ນໄວ້ໃນມືຂອງລາວ.
5ພຣະຢາເວລົງມາໃນເມກ ແລະຢືນຢູ່ກັບໂມເຊທີ່ນັ້ນ, ລາວໄດ້ເປັ່ງສຽງອອກພຣະນາມ "ພຣະຢາເວ."6ພຣະຢາເວໄດ້ຜ່ານລາວໄປກ່ອນ
ແລະກ່າວວ່າ, "ເຮົາຄືພຣະຢາເວ, ພຣະຢາເວ, ພຣະເຈົ້າຜູ້ຊຶ່ງເຕັມໄປດ້ວຍຄວາມເມດຕາ, ໂກດຮ້າຍຊ້າ, ແລະເຕັມໄປດ້ວຍຄວາມສັດຊື່
ຕໍ່ຄໍາຫມັ້ນສັນຍາ ແລະໄວ້ວາງໃຈໄດ້,7ຜູ້ຮັກສາຄວາມສັດຊື່ຕໍ່ຄໍາຫມັ້ນສັນຍາໄວ້ໃຫ້ກັບຄົນເປັນພັນໆຊົ່ວອາຍຸຄົນ, ໃຫ້ອະພັຍການລ່ວງລະເມີດ,
ການທໍຣະຍົດ, ແລະບາບທັງຫລາຍ. ແຕ່ພຣະອົງບໍ່ລະເວັ້ນການລົງໂທດຢ່າງແນ່ນອນ. ພຣະອົງໃຫ້ໂທດຄວາມບາບຂອງພໍ່ຕົກທອດໄປເຖິງລູກ
ແລະຫລານ, ເຖິງສາມແລະສີ່ຊົ່ວອາຍຸຄົນ."
8ໂມເຊຈຶ່ງຮີບຫມອບລົງເຖິງດິນ ແລະໄດ້ນະມັດສະການ.9ແລ້ວລາວໄດ້ກາບທູນວ່າ, "ຖ້າຂ້ານ້ອຍເປັນທີ່ພໍໃຈໃນພຣະເນດຂອງພຣະອົງ, ໂອ
ພຣະຜູ້ເປັນເຈົ້າ, ກໍຂໍພຣະອົງໂຜດໄປກັບພວກຂ້ານ້ອຍ, ເພາະປະຊາຊົນເຫລົ່ານີ້ຫົວດື້. ຂໍໂຜດໄດ້ອະພັຍການລ່ວງລະເມີດ
ແລະຄວາມບາບຂອງພວກຂ້ານ້ອຍທັງຫລາຍ, ແລະຂໍຮັບພວກຂ້ານ້ອຍເປັນມໍຣະດົກຂອງພຣະອົງດ້ວຍ."
10ພຣະຢາເວກ່າວວ່າ, "ເບິ່ງແມ, ເຮົາຈະເຮັດພັນທະສັນຍາ, ຕໍ່ຫນ້າປະຊາຊົນຂອງເຮົາທັງຫມົດ, ເຮົາຈະເຮັດການອັດສະຈັນ
ຊຶ່ງບໍ່ມີໃຜເຄີຍເຮັດໃນທົ່ວແຜ່ນດິນໂລກ ຫລືໃນຊົນຊາດໃດໆທັງປວງ. ປະຊາຊົນທັງຫມົດ ຊຶ່ງເຈົ້າຢູ່ທ່າມກາງເຈົ້ານັ້ນ,
ຈະໄດ້ເຫັນຣາຊະກິດຂອງເຮົາ, ເພາະເຮົາຈະເຮັດສິ່ງນີ້ ເພື່ອພວກເຈົ້າຈະເປັນສິ່ງທີ່ຫນ້າຢ້ານກົວ.11ຈົ່ງເຊື່ອຟັງສິ່ງທີ່ເຮົາໄດ້ສັ່ງພວກເຈົ້າໃນມື້ນີ້.
ເຮົາຈະຂັບໄລ່ຊາວອະໂມຣິດ, ຊາວການາອານ, ຊາວຮິດຕີ, ຊາວເປຣິຊີ, ຊາວຮີວີ, ແລະຊາວເຢບຸດ ໄປໃຫ້ພົ້ນຫນ້າພວກເຈົ້າ.
12ຈົ່ງລະວັງຕົວໃຫ້ດີ ຢ່າໄດ້ໄປເຮັດຂໍ້ຕົກລົງກັບ ຜູ້ທີ່ອາໄສຢູ່ໃນແຜ່ນດິນນັ້ນ ຊຶ່ງເຈົ້າກໍາລັງຫມຸ້ງຫນ້າໄປ,
ບໍ່ສະນັ້ນພວກຂົາຈະເປັນກັບດັກທ່າມກາງພວກເຈົ້າ.13ແຕ່ເຈົ້າທັງຫລາຍຈົ່ງທໍາລາຍ ບັນດາແທ່ນບູຊາຂອງພວກເຂົາ,
ທັບບັນດາເສົາຫີນຂອງພວກເຂົາໃຫ້ມຸ່ນລະອຽດ, ແລະ ປ້ຳບັນດາເສົາຂອງອາເຊຣາຂອງພວກເຂົາເສຍ.
14ພວກເຈົ້າຕ້ອງບໍ່ນະມັດສະການພະອື່ນ, ເພາະພຣະຢາເວ, ຜູ້ມີພຣະນາມວ່າ ຫວງແຫນ, ເປັນພຣະເຈົ້າຜູ້ຫວງແຫນ.
15ດັ່ງນັ້ນຈົ່ງລະວັງ ຢ່າເຮັດສັນຍາກັບຜູ້ທີ່ອາໄສຢູ່ໃນແຜ່ນດິນນັ້ນ, ເພາະເມື່ອພວກເຂົານອກໃຈພະເຫລົ່ານັ້ນຂອງພວກເຂົາ,
ແລະພວກເຂົາຖວາຍບູຊາພະເຫລົ່ານັ້ນຂອງພວກເຂົາ. ແລ້ວພວກເຂົາຈະເຊີນພວກເຈົ້າໄປຮ່ວມດ້ວຍ
ແລະພວກເຈົ້າຈະກິນຂອງທີ່ພວກເຂົາຖວາຍບູຊານັ້ນ,
16ແລ້ວເມື່ອພວກເຈົ້າຈະຮັບບັນດາລູກຍິງຂອງພວກເຂົາມາໃຫ້ແກ່ບັນດາລູກຊາຍຂອງພວກເຈົ້າ,
ແລະບັນດາລູກຍິງຂອງເຂົາຈະເຮັດໃຫ້ລູກຊາຍຂອງພວກເຈົ້ານັ້ນ ຈະນອກໃຈເຮົາຫັນໄປຫາພະເຫລົ່ານັ້ນຂອງພວກເຂົາ.
17ຈົ່ງຢ່າຫລໍ່ບັນດາຮູບພະທີ່ເຮັດຈາກໂລຫະໄວ້ສໍາລັບຕົນເອງ.
18ເຈົ້າຕ້ອງຖືເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ. ຕາມທີ່ເຮົາໄດ້ຊົງສັ່ງເຈົ້າ, ເຈົ້າຕ້ອງກິນເຂົ້າຈີ່ເຈັດມື້ຕາມກໍາຫນົດໃນເດືອນອາບີບ,
ເພາະໃນເດືອນອາບີບເຈົ້າໄດ້ອອກຈາກອີຢິບ.
19ລູກກົກທັງຫມົດເປັນຂອງເຮົາ, ແມ້ແຕ່ ລູກສັດໂຕຜູ້ທຸກໂຕຂອງງົວ, ແລະຂອງແກະ.20ເຈົ້າຕ້ອງຊື້ຄືນລູກລໍຫົວປີນັ້ນດ້ວຍລູກແກະ,
ແຕ່ຖ້າເຈົ້າບໍ່ຢາກຊື້ຄືນ ແລ້ວເຈົ້າຈົ່ງຫັກຄໍມັນເສຍ. ເຈົ້າຕ້ອງຊື້ຄືນລູກຊາຍກົກທັງຫມົດຂອງເຈົ້າຄືນ. ຫ້າມຜູ້ໃດມາຫາເຮົາມືເປົ່າ.
21ເຈົ້າຈົ່ງເຮັດວຽກຫົກມື້, ແຕ່ໃນມື້ທີ່ເຈັດເຈົ້າຕ້ອງຢຸດພັກຜ່ອນ, ແມ້ແຕ່ໃນລະດູໄຖນາ ແລະລະດູເກັບກ່ຽວກໍຕາມ, ເຈົ້າຕ້ອງຢຸດພັກຜ່ອນ.
22ເຈົ້າຕ້ອງສະຫລອງເທສະການປະຈໍາອາທິດ ດ້ວຍພືດຜົນທໍາອິດຂອງການເກັບກ່ຽວເຂົ້າສາລີ,
ແລະເຈົ້າຕ້ອງສະຫລອງເທສະການຮວບຮວມຜະລິດຜົນໃນທ້າຍປີ.
23ປີລະສາມຄັ້ງ ຈົ່ງໃຫ້ຜູ້ຊາຍທຸກຄົນຂອງເຈົ້າເຂົ້າມາເຝົ້າຕໍ່ພຣະພັກພຣະຢາເວ, ພຣະເຈົ້າຂອງອິສະຣາເອນ.
24ເພາະເຮົາຈະຂັບໄລ່ຊົນຊາດທັງຫລາຍອອກໄປ ໃຫ້ພົ້ນຫນ້າພວກເຈົ້າ ແລະຂະຫຍາຍເຂດແດນຂອງເຈົ້າອອກໄປ.
ບໍ່ມີໃຜຢາກໄດ້ແຜ່ນດິນຂອງເຈົ້າເລີຍ ເມື່ອເຈົ້າຈະຂຶ້ນໄປຫາພຣະຢາເວພຣະເຈົ້າຂອງເຈົ້າປີລະສາມຄັ້ງນັ້ນ.
25ເຈົ້າຕ້ອງບໍ່ຖວາຍເລືອດຂອງເຄື່ອງບູຊາຂອງເຮົາພ້ອມກັບເຊື້ອແປ້ງ, ຫລືຫ້າມເຫລືອຊີ້ນຈາກການຖວາຍບູຊາ
ໃນເທສະການປັດສະຄາໄວ້ຈົນເຖິງຕອນເຊົ້າ.26ເຈົ້າຕ້ອງນໍາພືດຜົນທໍາອິດທີ່ດີທີ່ສຸດ ຈາກແຜ່ນດິນຂອງເຈົ້າມາຖວາຍຍັງເຮືອນຂອງເຮົາ.
ເຈົ້າຕ້ອງບໍ່ຕົ້ມຊີ້ນລູກແບ້ດ້ວຍນ້ຳນົມແມ່ຂອງມັນ."
27ພຣະຢາເວກ່າວກັບໂມເຊວ່າ, "ເຈົ້າຈົ່ງຂຽນຖ້ອຍຄໍາເຫລົ່ານີ້ໄວ້, ເພາະເຮົາໄດ້ສັນຍາດ້ວຍຕົວເຮົາເອງຖ້ອຍຄໍາເຫລົ່ານີ້ທີ່ ເຮົາໄດ້ກ່າວໄວ້
ແລະໄດ້ເຮັດພັນທະສັນຍາກັບພວກເຈົ້າ ແລະອິສະຣາເອ."28ໂມເຊຢູ່ກັບພຣະຢາເວທີ່ນັ້ນສີ່ສິບມື້ ແລະສີ່ສິບຄືນ; ລາວບໍ່ໄດ້ກິນອາຫານ
ຫລືດື່ມນ້ຳເລີຍ. ພຣະອົງໄດ້ຈາຣຶກຖ້ອຍຄໍາແຫ່ງພັນທະສັນຍາໄວ້ເທິງແຜ່ນຫີນ, ຄືພຣະບັນຍັດສິບປະການ.
29ເມື່ອໂມເຊລົງມາຈາກພູຊີນາຍ ມີແຜ່ນພຣະບັນຍັດສອງແຜ່ນໃນມືຂອງລາວດ້ວຍ,
ລາວບໍ່ໄດ້ຮູ້ໃບຫນ້າຂອງລາວສ່ອງແສງປະກາຍໃນຂະນະທີ່ລາວສົນທະນາກັບພຣະເຈົ້າ.30ເມື່ອອາໂຣນ ແລະຊາວອິສະຣາເອນເຫັນໂມເຊ,
ໃບຫນ້າຂອງລາວກໍສ່ອງແສງປະກາຍ, ແລະພວກເຂົາກໍຢ້ານບໍ່ກ້າເຂົ້າມາໃກ້ລາວ.31ແຕ່ໂມເຊຈຶ່ງໄດ້ເອີ້ນພວກເຂົາມາ, ແລະອາໂຣນ
ແລະຜູ້ນໍາທັງຫມົດຂອງຊຸມນຸມຊົນກໍກັບມາຫາລາວ, ແລ້ວໂມເຊກ່າວກັບພວກເຂົາ.
32ຫລັງຈາກປະຊາຊົນອິສະຣາເອນທັງຫມົດໄດ້ເຂົ້າມາຫາໂມເຊ,
ແລະລາວຈຶ່ງບອກພຣະບັນຍັດທັງຫມົດແກ່ເຂົາທັງຫລາຍຕາມທີ່ພຣະຢາເວໄດ້ປະທານໃຫ້ລາວເທິງພູຊີນາຍ.
33ເມື່ອໂມເຊເວົ້າກັບພວກເຂົາຈົບແລ້ວ, ລາວກໍໃຊ້ຜ້າຄຸມຫນ້າໄວ້.

[34]ເມື່ອໃດກໍຕາມທີ່ໂມເຊ ເຂົ້າເຝົ້າພຣະພັກພຣະຢາເວເພື່ອກ່າວກັບພຣະອົງ, ລາວກໍປົດຜ້າອອກ, ຈົນກວ່າລາວຈະກັບອອກມາ,
ເມື່ອລາວອອກມາ, ລາວກໍໄດ້ເລົ່າໃຫ້ຊາວອິສະຣາເອນເຖິງສິ່ງທີ່ລາວໄດ້ຮັບຄຳສັ່ງໃຫ້ເວົ້າ. [35]ເມື່ອຊາວອິສະຣາເອນເຫັນໂມເຊມີແສງປະກາຍ,
ລາວກໍຈະໃຊ້ຜ້າຄຸມຫນ້າອີກ ຈົນກວ່າຈະໄດ້ເຂົ້າໄປທູນຕໍ່ພຣະເຢເວ.

 generated on Tue Jun 17 19:01:42 2025

35 [1]ໂມເຊເອີ້ນຊຸມນຸມຊາວອິສະຣາເອນທັງຫມົດມາປະຊຸມກັນ ແລະກ່າວກັບພວກເຂົາວ່າ,
"ເຫລົ່ານີ້ເປັນສິ່ງທີ່ພຣະຢາເວໄດ້ສັ່ງໃຫ້ເຈົ້າທັງຫລາຍເຮັດ.[2]ຈົ່ງເຮັດວຽກຫົກມື້ໃຫ້ສຳເລັດ, ແຕ່ສຳລັບເຈົ້າ, ມື້ທີເຈັດຈະຕ້ອງເປັນມື້ບໍຣິສຸດ,
ວັນສະບາໂຕຂອງການຢຸດພັກຜ່ອນຢ່າງຫມົດສິ້ນ, ບໍຣິສຸດແດ່ພຣະຢາເວ. ໃຜກໍຕາມທີ່ເຮັດວຽກໃນມື້ນັ້ນ ຈະຕ້ອງຖືກລົງໂທດເຖິງຕາຍ.
[3]ເຈົ້າຕ້ອງບໍ່ດັງໄຟໃນເຮືອນຂອງພວກເຈົ້າ ໃນວັນສະບາໂຕນັ້ນ."

[4]ໂມເຊກ່າວກັບຊຸມນຸມທັງສິ້ນຂອງອິສະຣາເອນ, ກ່າວວ່າ, "ນີ້ຄືສິ່ງທີ່ພຣະຢາເວໄດ້ສັ່ງໄວ້.[5]ຈົ່ງນຳເຄື່ອງບູຊາມາຖວາຍແດ່ພຣະຢາເວ,
ທຸກຄົນໃນພວກເຈົ້າທີ່ເຕັມໃຈ. ຈົ່ງນຳສິ່ງຂອງມາຖວາຍແດ່ພຣະຢາເວ—ຄຳ, ເງິນ, ທອງແດງ,[6]ດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ,
ຜ້າປ່ານຢ່າງດີ; ຂົນແບ້;[7]ບັນດາຫນັງແກະໂຕຜູ້ຍ້ອມສີແດງ; ແລະບັນດາຫນັງງົວທະເລ; ໄມ້ກະຖິນເທດ;
[8]ນ້ຳມັນຄົນຕະກຽງສຳລັບສະຖານນະມັດສະການ, ເຄື່ອງເທດສຳລັບປຸງນ້ຳມັນໄວ້ເຈີມ ແລະສຳລັບປຸງເຄື່ອງຫອມ,[9]ພອຍສີນ້ຳເຂົ້າ
ແລະພອຍຕ່າງໆສຳລັບຕິດໃນເອໂຟດ ແລະ ເສື້ອຮັດເອິກ.
[10]ພວກເຈົ້າທຸກຄົນທີ່ມີຄວາມຊຳນານຈົ່ງມາຊ່ວຍກັນ ແລະເຮັດຕາມທີ່ພຣະຢາເວຊົງສັ່ງເຖີ້ນ—[11]ຫໍເຕັນພ້ອມກັບເຕັນ, ຜ້າຄຸມເຕັນ,
ບັນດາຂໍກ່ຽວ, ບັນດາໂຄງໄມ້, ບັນດາກອນ, ບັນດາເສົາ, ແລະບັນດາຖານຮອງຮັບເສົາ;[12]ລວມເຖິງຫີບພ້ອມກັບຄານສຳລັບຫາມ,
ຝາຫີບແຫ່ງການໄຖ່ບາບ, ແລະຜ້າກັ້ງບັງຕາດ້ວຍ.
[13]ພວກເຂົາຈຶ່ງໄດ້ນຳໂຕະພ້ອມກັບໄມ້ຄານສຳລັບຫາມ, ເຄື່ອງໃຊ້ທຸກຢ່າງສຳລັບໂຕະ, ແລະເຂົ້າຈີ່ວາງຕໍ່ຫນ້າ;[14]ຄັນຕະກຽງທີ່ໃຫ້ແສງສະຫວ່າງ,
ພ້ອມກັບອຸປະກອນຕ່າງໆສຳລັບຄັນຕະກຽງ, ບັນດາຕະກຽງ, ແລະນ້ຳມັນຈູດບັນດາຕະກຽງ;[15]ແທ່ນເຜົາເຄື່ອງຫອມພ້ອມກັບບັນດາໄມ້ຄານ,
ນ້ຳມັນເຈີມ ແລະເຄື່ອງຫອມ; ຜ້າກັ້ງບັງຕາສຳລັບທາງເຂົ້າຫໍເຕັນ;[16]ແທ່ນສຳລັບເຄື່ອງເຜົາບູຊາ ພ້ອມດ້ວຍຕາຫນ່າງທອງແດງ
ແລະບັນດາໄມ້ຄານຫາມ ແລະເຄື່ອງໃຊ້ຕ່າງໆຂອງແທ່ນ; ແລະອ່າງຂະຫນາດໃຫຍ່ກັບຖານຮອງ.
[17]ພວກເຂົາຈຶ່ງໄດ້ນຳຜ້າກັ້ງສຳລັບກັ້ນລານຫໍເຕັນ ພ້ອມທັງເສົາ ແລະຖານຮອງຮັບເສົາ, ແລະຜ້າກັ້ງບັງຕາສຳລັບທາງເຂົ້າລານ;
[18]ແລະບັນດາຫລັກຫມຸດສຳລັບຫໍເຕັນ ແລະບັນດາຫລັກຫມຸດສຳລັບລານຫໍເຕັນ, ພ້ອມກັບບັນດາເຊືອກ.[19]ພວກເຂົາຈຶ່ງນຳເຄື່ອງແຕ່ງກາຍຕ່າງໆ
ທີ່ຫຍິບດ້ວຍມືຢ່າງວິຈິດບັນຈົງສຳລັບການຮັບໃຊ້ໃນສະຖານບໍຣິສຸດ, ເຄື່ອງແຕ່ງກາຍບໍຣິສຸດຕ່າງໆສຳລັບອາໂຣນປະໂຣຫິດ
ແລະບັນດາລູກຊາຍຂອງລາວ, ເພື່ອໃຫ້ພວກເຂົາໃຊ້ປະຕິບັດງານຂອງປະໂລຫິດ."
[20]ແລ້ວທຸກເຜົ່າຂອງອິສະຣາເອນແຍກຍ້າຍ ແລະຈາກກັນໄປຈາກໂມເຊ.[21]ທຸກຄົນທີ່ເຕັມໃຈ ແລະປາຖະຫນາທີ່ຈະຖວາຍ
ຕ່າງກໍໄດ້ນຳສິ່ງຂອງມາຖວາຍແດ່ພຣະຢາເວ ສຳລັບການສ້າງຫໍເຕັນ, ອຸປະກອນທຸກຢ່າງສຳລັບວຽກຮັບໃຊ້ໃນຫໍເຕັນ,
ແລະສຳລັບເຄື່ອງແຕ່ງກາຍບໍຣິສຸດຕ່າງໆ.[22]ພວກເຂົາໄດ້ມາ, ທັງຊາຍ ແລະຍິງ, ຄືທຸກຄົນທີ່ເຕັມໃຈ. ພວກເຂົາໄດ້ນຳເຂັມຄັດ, ບັນດາຕຸ້ມຫູ,
ບັນດາແຫວນ, ແລະບັນດາເຄື່ອງປະດັບ, ທຸກອັນລ້ວນເປັນຄຳ. ພວກເຂົາທຸກຄົນໄດ້ນຳສິ່ງຂອງຖວາຍເປັນຄຳມາ
ເປັນເຄື່ອງບູຊາໂບກຖວາຍແດ່ພຣະຢາເວ.
[23]ທຸກຄົນທີ່ມີດ້າຍຂົນແກະສີຟ້າ, ສີມ່ວງ, ຫລື ສີແດງເຂັ້ມ, ຜ້າປ່ານຢ່າງດີ, ຂົນແບ້, ບັນດາຫນັງແກະໂຕຜູ້ຍ້ອມສີແດງ, ຫລື
ບັນດາຫນັງງົວກໍໄດ້ເອົາສິ່ງຂອງເຫລົ່ານັ້ນມາຖວາຍ.[24]ທຸກຄົນທີ່ເຮັດເຄື່ອງຖວາຍຈາກເງິນ ຫລື ຈາກທອງແດງ ກໍໄດ້ນຳມາຖວາຍແດ່ພຣະຢາເວ,
ແລະທຸກຄົນທີ່ມີໄມ້ກະຖິນເທດ ທີ່ໃຊ້ກັບວຽກໃດໄດ້ ກໍນຳໄມ້ນັ້ນມາຖວາຍ.
[25]ຜູ້ຍິງທຸກຄົນທີ່ຊຳນານໃນການປັ່ນຂົນແກະດ້ວຍມື ແລະກໍໄດ້ນຳດ້າຍຂົນແກະມາປັ່ນ—ສີຟ້າ, ສີມ່ວງ, ຫລືສີແດງເຂັ້ມ,
ຫລືຜ້າປ່ານປັ່ນຢ່າງດີມາ.[26]ຜູ້ຍິງທຸກຄົນທີ່ເຕັມໃຈ ແລະຊຳນານກໍໄດ້ປັ່ນຂົນແບ້.
[27]ພວກຜູ້ນຳກໍນຳພອຍສີນ້ຳເຂົ້າ ແລະພອຍອື່ນໆ ສຳລັບຕິດໃນເອໂຟດ ແລະເສື້ອຮັດເອິກ;[28]ພວກເຂົາໄດ້ນຳພວກເຄື່ອງເທດ
ນ້ຳມັນສຳລັບຕະກຽງຕ່າງໆ, ນ້ຳມັນສຳລັບເຈີມ, ແລະເຄື່ອງເທດສຳລັບປຸງເຄື່ອງຫອມ.
[29]ຊາວອິສະຣາເອນທີ່ເຕັມໃຈກໍນຳພວກເຂົາແດ່ພຣະຢາເວ; ສຳລັບວຽກທຸກຢ່າງ ຊາຍແລະຍິງທຸກຄົນທີ່ເຕັມໃຈ
ກໍໄດ້ນຳວັດສະດຸຕ່າງໆທີ່ໃຊ້ສຳລັບວຽກ ຊຶ່ງພຣະຢາເວໄດ້ຊົງສັ່ງຜ່ານທາງໂມເຊໃຫ້ພວກເຂົາເຮັດ.
[30]ໂມເຊໄດ້ກ່າວກັບອິສະຣາເອນວ່າ, "ເບິ່ງແມ, ພຣະຢາເວໄດ້ເອີ້ນຊື່ເບຊາເລນລູກຊາຍຂອງອູເຣ, ຈາກເຜົ່າຢູດາ.
[31]ພຣະອົງໄດ້ເຕີມໃຫ້ເບຊາເລນ ເຕັມປ່ຽມດ້ວຍພຣະວິນຍານຂອງພຣະເຈົ້າ, ໃຫ້ລາວມີສະຕິປັນຍາ, ຄວາມເຂົ້າໃຈ,
ແລະຄວາມຮູ້ໃນງານຊ່າງທຸກຢ່າງ,[32]ເພື່ອອອກແບບຢ່າງວິຈິດບັນຈົງໃນການເຮັດເຄື່ອງຄຳ, ເງິນ, ແລະ ທອງແດງ;
[33]ໃນການເຈຍລະໄນພອຍຕ່າງໆ, ແລະໃນການຕິດໃນຕົວເຮືອນ ໃນການແກະສະລັກໄມ້—ສຳລັບງານອອກແບບທຸກຊະນິດ ແລະ
ງານຊ່າງທຸກຢ່າງດ້ວຍ.
[34]ພຣະອົງໄດ້ໃສ່ຫົວໃຈແຫ່ງການສອນໃຫ້ແກ່ລາວ, ລວມທັງລາວ ແລະໂອໂຮລຽບລູກຊາຍອາຮີສາມັກ, ຈາກເຜົ່າດານ.
[35]ພຣະອົງໄດ້ປຣະທານທັກສະໃຫ້ຄົນທັງສອງນີ້ ໃນການເຮັດວຽກ, ວຽກອອກແບບ, ວຽກແກະສະຫລັກ, ແລະວຽກແສ່ວດ້ວຍຂົນແກະຄືສີຟ້າ,
ສີມ່ວງ, ແລະສີແດງເຂັ້ມ ແລະຜ້າປ່ານຢ່າງດີ, ແລະຊ່າງຫຍິບ. ພວກເຂົາເປັນຊ່າງຝີມືເຮັດໄດ້ທຸກຢ່າງ,
ແລະເປັນຊ່າງອອກແບບຢ່າງວິຈິດບັນຈົງ.

 generated on Tue Jun 17 19:01:42 2025

36 [1]ດັ່ງນັ້ນເບຊາເລນ ແລະ ໂອໂຮລຽບ ແລະຊ່າງຝີມືທຸກຄົນ ທີ່ພຣະຢາເວໄດ້ປຣະທານທັກສະ
ແລະຄວາມສາມາດໃຫ້ຮູ້ຈັກວິທີການເຮັດວຽກທຸກຢ່າງ ໃນການສ້າງສະຖານບໍຣິສຸດ
ທີ່ຈະຕ້ອງເຮັດວຽກຕາມທຸກຢ່າງທີ່ພຣະຢາເວໄດ້ຊົງສັ່ງໄວ້."

[2]ໂມເຊຈຶ່ງໄດ້ເອີ້ນເບຊາເລນ ແລະໂອໂຮລຽບ ແລະຊ່າງສີມືທຸກຄົນ ຊຶ່ງພຣະຢາເວປຣະທານສະຕິປັນຍາໄວ້ໃນໃຈຂອງເຂົາ,
ແລະຄືຄົນທີ່ເຕັມໃຈມາ ແລະເຮັດວຽກ.[3]ພວກເຂົາໄດ້ຮັບສິ່ງຂອງຖວາຍທຸກຢ່າງມາຈາກໂມເຊ
ຄືສິ່ງຂອງຖວາຍທີ່ຊາວອິສະຣາເອນໄດ້ນໍາມາຖວາຍເພື່ອສ້າງສະຖານບໍຣິສຸດ.
ປະຊາຊົນຍັງນໍາບັນດາເຄື່ອງຖວາຍມາໃຫ້ໂມເຊດ້ວຍຄວາມເຕັມໃຈອີກທຸກເຊົ້າ.[4]ດັ່ງນັ້ນຊ່າງຝີມືທຸກຄົນທີ່ກໍາເຮັດວຽກເພື່ອສະຖານບໍຣິສຸດນັ້ນ
ຕ່າງກໍໄດ້ປະລະຈາກວຽກຂອງຕົນທີ່ໄດ້ເຮັດຢູ່.
[5]ພວກຊ່າງສີມືໄດ້ບອກໂມເຊວ່າ, "ປະຊາຊົນນໍາສິ່ງຂອງມາຖວາຍຫລາຍເກີນຄວາມຕ້ອງການ
ທີ່ຈະໃຊ້ໃນວຽກຊຶ່ງພຣະຢາເວໄດ້ສັ່ງໃຫ້ພວກເຮົາເຮັດນັ້ນ."[6]ດັ່ງນັ້ນໂມເຊຈຶ່ງສັ່ງໃຫ້ປະກາດໄປທົ່ວຄ້າຍວ່າ
ບໍ່ໃຫ້ໃຜກໍຕາມນໍາສິ່ງຂອງຖວາຍມາສ້າງສະຖານບໍຣິສຸດອີກແລ້ວ ແລ້ວປະຊາຊົນຈຶ່ງໄດ້ຢຸດທີ່ຈະນໍາຂອງເຫລົ່ານັ້ນມາ.
[7]ພວກຊ່າງໄດ້ມີອຸປະກອນທີ່ຫລາຍເກີນພໍແລ້ວ ສໍາລັບວຽກທີ່ຈະຕ້ອງເຮັດທັງຫມົດ.
[8]ດັ່ງນັ້ນຊ່າງສີມືທຸກຄົນໃນຫມູ່ພວກເຂົາໄດ້ສ້າງຫໍເຕັນ ດ້ວຍຜ້າກັ້ງສິບຜືນ ທີ່ເຮັດຈາກຜ້າປ່ານເນື້ອດີ ແລະດ້ານຂົນແກະສີຟ້າ, ສີມ່ວງ,
ສີແດງເຂັ້ມ ຊຶ່ງອອກແບບເປັນຮູບພາບເຄຣູບຕ່າງໆ. ນີ້ເປັນວຽກຂອງເບຊາເລນ, ຊຶ່ງເປັນຊ່າງສີມືທີ່ເກັ່ງຫລາຍ.
[9]ຄວາມຍາວຂອງຜ້າກັ້ງແຕ່ລະຜືນຄືຊາວແປດສອກ, ກວ້າງສີ່ສອກ. ຜ້າກັ້ງທັງຫມົດມີຂະຫນາດເທົ່າກັນ.
[10]ເບຊາເລນໄດ້ເອົາຜ້າກັ້ງຫ້າຜືນແກະຕິດກັນ, ແລະອີກຫ້າຜືນນັ້ນກໍໄດ້ແກະຕິດກັນດ້ວຍ.
[11]ລາວໄດ້ເຮັດຫູຜ້າກັ້ງດ້ວຍດ້າຍສີຟ້າ ຕິດໄວ້ຕາມຂອບຜ້າກັ້ງດ້ານນອກສຸດຂອງຊຸດທີ່ຫນຶ່ງ,
ແລະລາວກໍໄດ້ເຮັດຢ່າງດຽວກັນທີ່ດ້ານນອກຂອບຜ້າກັ້ງໃນຜ້າກັ້ງຊຸດທີ່ສອງ.[12]ລາວໄດ້ເຮັດຫູຂອງຜ້າກັ້ງຜືນທໍາອິດຫ້າສິບຫູ
ແລະຕາມຂອບຜ້າກັ້ງຊຸດທີ່ສອງ ຫ້າສິບຫູ. ດັ່ງນັ້ນຫູຂອງຜັງກັ້ງຈຶ່ງຢູ່ກົງກັນຂວ້າມກັນ.[13]ລາວໄດ້ເຮັດຂໍເກາະທອງຄໍາ ຫ້າສິບອັນ ແລະ
ໃຊ້ກ່ຽວຫູຂອງແຖບຜ້າກັ້ງເຂົ້າດ້ວຍກັນ ເພື່ອໃຫ້ຫໍເຕັນເປັນຫນຶ່ງດຽວກັນ.
[14]ເບຊາເລນໄດ້ເຮັດຜ້າກັ້ງຂົນແບ້ສໍາລັບເຕັນຄຸມຫໍເຕັນອີກສິບເອັດຜືນ.[15]ຄວາມຍາວຂອງຜ້າກັ້ງ ແຕ່ລະຜືນມີຂະຫນາດສາມສິບສອກ,
ແລະກວ້າງສີ່ສອກ. ທັງສິບເອັດຜືນມີຂະຫນາດເທົ່າກັນ.[16]ລາວໄດ້ກ່ຽວຜ້າກັ້ງເຂົ້າດ້ວຍກັນ
ແລະສ່ວນອີກຫົກຜືນກໍກ່ຽວຕິດກັນແຍກໄວ້ຕ່າງຫາກ.[17]ລາວໄດ້ເຮັດຫູຜ້າກັ້ງຫ້າສິບຫູຕິດກັບຂອບຜ້າກັ້ງຂອງຊຸດທໍາອິດ,
ແລະຫູຜ້າກັ້ງອີກຫ້າສິບຫູຕິດກັບຂອບຜ້າກັ້ງ ເພື່ອກ່ຽວກັບຜ້າກັ້ງຊຸດທີ່ສອງ.
[18]ເບຊາເລນໄດ້ເຮັດຂໍເກາະທອງແດງຫ້າສິບອັນ ກ່ຽວຫູເຕັນໃຫ້ເປັນຫລັງດຽວກັນ.[19]ລາວໄດ້ເຮັດຜ້າຄຸມຫໍເຕັນ ດ້ວຍຫນັງແກະໂຕຜູ້
ຍ້ອມສີແດງຊັ້ນຫນຶ່ງ, ແລະຄຸມທັບດ້ວຍຫນັງຢ່າງດີອີກຊັ້ນຫນຶ່ງ.
[20]ເບຊາເລນໄດ້ເຮັດໂຄງໄມ້ແນວຕັ້ງສໍາລັບຄ້ໍາຫໍເຕັນຈາກໄມ້ກະຖິນເທດ.[21]ຄວາມຍາວຂອງແຕ່ໂຄງໄມ້ເປັນສິບສອກ ແລະກວ້າງຫນຶ່ງສອກເຄິ່ງ.
[22]ໂຄງໄມ້ແຕ່ລະອັນມີຫ້ອຍໄມ້ສອງອັນ ເພື່ອໃຫ້ຍຶດໂຄງໄມ້ຕິດກັນ. ລາວໄດ້ເຮັດໂຄງໄມ້ທຸກອັນຂອງຫໍເຕັນຢ່າງນີ້.
[23]ລາວໄດ້ເຮັດໂຄງໄມ້ສໍາລັບຫໍເຕັນດັ່ງນີ້: ໂຄງໄມ້ດ້ານໃຕ້ຊາວອັນ.
[24]ເບຊາເລນໄດ້ເຮັດຖານເງິນສໍາລັບຮອງຮັບເດືອຍຈໍານວນສີ່ສິບອັນໃຕ້ໂຄງໄມ້ຊາວອັນ. ມີຖານສອງອັນໃຕ້ຂອງໄມ້ຫນຶ່ງອັນ
ເພື່ອເຊື່ອມອີກໂຄງຫນຶ່ງເຂົ້າດ້ວຍກັນ, ແລະຖານສອງອັນໃຕ້ແຕ່ລະໂຄງເພື່ອເຊື່ອມຕໍ່ແຕ່ລະໂຄງເຂົ້າດ້ວຍກັນ.
[25]ດ້ານທີ່ສອງຂອງຫໍເຕັນຂ້າງທິດເຫນືອນັ້ນ, ເຂົາໄດ້ເຮັດໂຄງໄມ້ຊາວອັນ.[26]ແລະຖານເງິນຮອງຮັບເດືອຍສີ່ສິບຖານ.
ມີຖານຮອງຮັບຫ້ອຍສອງອັນໃຕ້ໂຄງໄມ້ອັນທໍາອິດ, ອີກສອງອັນໃຕ້ຂອບຖັດໄປ, ແລະຕໍ່ໄປເລື້ອຍໆ.
[27]ສ່ວນດ້ານຫລັງຂອງຫໍເຕັນທາງທິດຕາເວັນຕົກ, ເບຊາເລນໄດ້ເຮັດໂຄງໄມ້ຫົກອັນ.[28]ລາວໄດ້ເຮັດໂຄງໄມ້ອີກສອງອັນ
ສໍາລັບມູມຫໍເຕັນດ້ານຫລັງ.
[29]ໂຄງໄມ້ເຫລົ່ານັ້ນມູນແຍກກັນຂ້າງລຸ່ມ, ແຕ່ເຊື່ອມຕໍ່ດ້ານເທິງຕິດກັນດ້ວຍຂໍເກາະອັນຫນຶ່ງ. ລາວໄດ້ເຮັດສອງຊຸດຢ່າງນີ້ໃຫ້ເກີດມູມສອງມູມ.
[30]ເປັນໂຄງໄມ້ແປດອັນພ້ອມກັບຖານເງິນທັງຫມົດ. ມີຖານສອງອັນໃຕ້ຖານອັນທໍາອິດ, ອີກສອງອັນໃຕ້ຖານຖັດໄປ, ແລະຕໍ່ໆໄປ.
[31]ເບຊາເລນໄດ້ເຮັດຮາວດ້ວຍໄມ້ກະຖິນເທດ-ຫ້າອັນສໍາລັບໂຄງໄມ້ຝາຫໍເຕັນດ້ານຫນຶ່ງ,[32]ຮາວອີກຫ້າອັນສໍາລັບໂຄງໄມ້ຝາຫໍເຕັນອີກດ້ານຫນຶ່ງ,
ຮາວອີກຫ້າອັນສໍາລັບໂຄງໄມ້ຝາຫໍເຕັນດ້ານຫລັງທາງທິດຕາເວັນຕົກ.[33]ລາວໄດ້ເຮັດຮາວຢູ່ລະຫວ່າງກາງຂອງໂຄງໄມ້, ນັ້ນຫມາຍຄວາມວ່າ,
ຕົວກາງໃຫ້ຮ້ອຍຕອນກາງຂອງໂຄງໄມ້ ສໍາລັບຝາຕັ້ງແຕ່ປາຍຫນຶ່ງໄປຈົນຮອດອີກປາຍຫນຶ່ງ.[34]ລາວໄດ້ຫຸ້ມໂຄງໄມ້ເຫລົ່ານັ້ນດ້ວຍທອງຄໍາ,
ລາວໄດ້ເຮັດຂໍເກາະທອງຄໍາສໍາລັບຮ້ອຍຮາວ, ແລະລາວຫຸ້ມຮາວນັ້ນດ້ວຍທອງຄໍາ.
[35]ເບຊາເລນໄດ້ເຮັດຜ້າກັ້ງຜືນຫນຶ່ງດ້ວຍດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ແລະດ້ວຍຜ້າປ່ານເນື້ອດີ,
ເປັນພາບເຄຣູບຊຶ່ງເປັນວຽກຂອງຊ່າງສີມື.[36]ລາວໄດ້ເຮັດເສົາຜ້າກັ້ງຈາກໄມ້ກະຖິນເທດ ສີ່ເສົາ ແລະຫຸ້ມດ້ວຍທອງຄໍາ.
ລາວໄດ້ເຮັດຂໍເກາະຕິດເສົານັ້ນດ້ວຍທອງຄໍາ, ແລະຫລໍ່ຖານເງິນສີ່ອັນສໍາລັບຮອງຮັບເສົານັ້ນ.
[37]ລາວໄດ້ເຮັດຜ້າກັ້ງບັງຕາ ສໍາລັບທາງເຂົ້າຫໍເຕັນ. ດ້ວຍດ້ານຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ໃຊ້ຜ້າປ່ານເນື້ອດີ, ຊຶ່ງວຽກຊ່າງແສ່ວ.
[38]ລາວຍັງໄດ້ເຮັດເສົາຫ້າຕົ້ນ ສໍາລັບຜ້າກັ້ງພ້ອມດ້ວຍຫູເກາະ. ລາວໄດ້ຫຸ້ມຍອດເສົາ ແລະຮາວຜ້າກັ້ງນັ້ນດ້ວຍທອງຄໍາ.
ຖານທັງຫ້າສໍາລັບຮອງຮັບເສົານັ້ນເຮັດດ້ວຍທອງແດງ

37 [1]ເບຊາເລນໄດ້ເຮັດຫີບດ້ວຍໄມ້ກະຖິນເທດ. ຍາວສອງສອກເຄິ່ງ; ກວ້າງຫນຶ່ງສອກເຄິ່ງ; ແລະ ສູງຫນຶ່ງສອກເຄິ່ງ.
[2]ລາວໄດ້ຫຸ້ມຫີບນັ້ນທັງດ້ານໃນ ແລະດ້ານນອກດ້ວຍທອງຄຳບໍຣິສຸດ ແລະໄດ້ເຮັດຂອບດ້ານເທິງດ້ວຍທອງຄຳອ້ອມຮອບຫີບນັ້ນ.
[3]ລາວໄດ້ຫລໍ່ຂໍເກາະທອງຄຳສີ່ຂໍ ສຳລັບຫີບນັ້ນຕິດໄວ້ທີ່ມູມທັງສີ່, ດ້ານຫນຶ່ງສອງຂໍແກະ ແລະອີກສອງຂໍອີກດ້ານຫນຶ່ງ.

[4]ລາວໄດ້ເຮັດຄານຫາມດ້ວຍໄມ້ກະຖິນເທດ ແລະຫູ້ມດ້ວຍທອງຄຳ.[5]ລາວໄດ້ສອດຄານຫາມເຂົ້າທີ່ ຂໍເກາະຂ້າງຫີບສຳລັບໃຊ້ຫາມຫີບນັ້ນ.
[6]ລາວໄດ້ເຮັດຝາຫີບໄຖ່ບາບດ້ວຍທອງຄຳບໍຣິສຸດ. ຍາວສອງສອກເຄິ່ງ, ແລະ ກວ້າງຫນຶ່ງສອກເຄິ່ງ.
[7]ເບຊາເລນໄດ້ເຮັດເຄຣູບຄຳສອງຮູບທີ່ຂຶ້ນຮູບດ້ວຍ ຄ້ອນທີ່ປາຍຝາຫີບໄຖ່ບາບ.[8]ເຄຣູບອົງຫນຶ່ງຢູ່ທີ່ປາຍຝາຫີບໄຖ່ບາບດ້ານຫນຶ່ງ,
ແລະອີກອົງຫນຶ່ງຢູ່ອີກດ້ານຫນຶ່ງ ພວກເຂົາໄດ້ເປັນເນື້ອດຽວກັນກັບຝາຫີບໄຖ່ບາບ.[9]ເຄຣູບໄດ້ກາງປີກຂຶ້ນສູງ ແລະ ປົກຄຸມຝາຫີບໄຖ່ບາບ.
ເຄຣູບແຕ່ລະອົງຫັນຫນ້າເຂົ້າຫາກັນ ແລະ ເບິ່ງມາທາງກາງຝາຫີບໄຖ່ບາບ.
[10]ເບຊາເລນໄດ້ເຮັດໂຕະຫນ່ວຍຫນຶ່ງຈາກໄມ້ກະຖິນເທດ. ຍາວສອງສອກ, ກວ້າງຫນຶ່ງສອກ, ແລະສູງຫນຶ່ງສອກເຄິ່ງ.
[11]ລາວໄດ້ຫຸ້ມໂຕະນັ້ນດ້ວຍທອງຄຳບໍຣິສຸດ ແລະເຮັດຂອບດ້ານເທິງດ້ວຍທອງຄຳອ້ອມຮອບໂຕະນັ້ນດ້ວຍ.
[12]ລາວໄດ້ໂຄງອ້ອມຮອບໂຕະກວ້າງຫນຶ່ງຝາມື, ອ້ອມຮອບໂຄງນັ້ນດ້ວຍຄຳ.[13]ລາວໄດ້ເຮັດຫູຂໍເກາະທອງຄຳສີ່ຂໍ, ຕິດໄວ້ທີ່ສີ່ມູມ,
ບ່ອນຂາໂຕະທັງສີ່.
[14]ຂໍເກາະນັ້ນຕິດກັບໂຄງສຳລັບສອດຄານຫາມ, ສຳລັບຫາມໂຕະ.[15]ລາວໄດ້ເຮັດຄານຫາມດ້ວຍໄມ້ກະຖິນເທດ ແລະຫຸ້ມດ້ວຍທອງຄຳ,
ສຳລັບຫາມໂຕະ.[16]ລາວໄດ້ເຮັດເຄື່ອງໃຊ້ທີ່ຢູ່ໂຕະນັ້ນ—ຈານທັງຫລາຍ, ບ່ວງທັງຫລາຍ, ອ່າງທັງຫລາຍ, ແລະໂຖທີ່ໃຊ້ຖອກເຄື່ອງດື່ມບູຊາ.
ລາວໄດ້ເຮັດສິ່ງເຫລົ່ານີ້ດ້ວຍທອງຄຳບໍຣິສຸດ.
[17]ລາວໄດ້ເຮັດຄັນຕະກຽງດ້ວຍທອງຄຳບໍຣິສຸດໂດຍໃຊ້ຄ້ອນຕີຂຶ້ນຮູບ. ລາວໄດ້ເຮັດພ້ອມທັງຖານ ແລະລຳຕົວຂອງຄັນຕະກຽງ. ຈອກທັງຫລາຍ,
ຮອງຕະກຽງ, ຖານໃບ, ແລະດອກຂອງມັນກໍເຮັດເປັນເນື້ອດຽວກັບຄັນຕະກຽງ.[18]ມີກິ່ງຫົກກິ່ງຂະຫຍາຍອອກຈາກຄັນຕະກຽງຂ້າງຂອງມັນ—
ຂ້າງລະສາມກິ່ງຂະຫຍາຍອອກຈາກຄັນ, ແລະອີກສາມກິ່ງຂະຫຍາຍອອກອີກຂ້າງຫນຶ່ງ.[19]ກິ່ງທຳອິດຈະຕ້ອງມີສາມຈອກ
ຄ້າຍຄືດອກໄມ້ຫມາກບົກ, ມີຖານໃບ, ແລະດອກ, ແລະອີກກິ່ງຫນຶ່ງມີສາມດອກເຮັດຄ້າຍຄືດອກໄມ້ຫມາກບົກ, ມີຖານໃບ ແລະດອກ.
ຈະຕ້ອງເຫມືອນກັນທັງຫົກກິ່ງທີ່ຍື່ນອອກມາຈາກຄັນຕະກຽງ.
[20]ເທິງຄັນຕະກຽງ, ຢູ່ທາງກາງ, ຈະຕ້ອງມີຈອກສີ່ຫນ່ວຍທີ່ເຮັດເປັນເຫມືອນຮູບດອກໄມ້ຫມາກບົກ, ຮອງດ້ວຍຖານໃບ ແລະດອກທັງຫລາຍ.
[21]ໃຫ້ເຮັດຖານໃບຫນຶ່ງອັນຮອງຮັບກິ່ງຂະຫນານຄູ່ທຳອິດ—ໃຫ້ເຮັດຂຶ້ນເປັນເນື້ອດຽວກັນ, ແລະອີກຖານໃບຫນຶ່ງຮອງຮັບກິ່ງຂະຫນານຄູ່ທີ່ສອງ
—ໃຫ້ເຮັດເປັນເນື້ອດຽວຄືກັນ. ໃນເຊັ່ນດຽວກັນອີກດອກຫນຶ່ງຮອງຮັບກິ່ງຂະຫນານຄູ່ທີ່ສາມ, ໃຫ້ເຮັດເປັນເນື້ອດຽວກັນ,
ຈະຕ້ອງເຫມືອນກັນສຳລັບທັງຫົກກິ່ງທີ່ຍື່ນອອກມາຈາກຄັນຕະກຽງ.[22]ຖານໃບ ແລະກິ່ງເປັນເນື້ອດຽວກັບຄັນຕະກຽງທັງຫມົດ,
ຕີຂຶ້ນຮູບເປັນເນື້ອດຽວກັນ ດ້ວຍທອງຄຳບໍຣິສຸດ.
[23]ເບຊາເລນໄດ້ເຮັດຄັນຕະກຽງ ແລະຕະກຽງເຈັດອັນ, ມີດຕັດໃສ້ຕະກຽງ ແລະຖາດຮອງເຮັດດ້ວຍທອງຄຳບໍຣິສຸດ.[24]ລາວໄດ້ເຮັດຄັນຕະກຽງ
ແລະເຄື່ອງໃຊ້ທຸກຢ່າງສຳລັບ ຄັນຕະກຽງນັ້ນດ້ວຍທອງຄຳບໍຣິສຸດຫນັກຫນຶ່ງຕະລັນ.
[25]ເບຊາເລນໄດ້ສ້າງແທ່ນບູຊາສຳລັບເຜົາເຄື່ອງຫອມ. ລາວໄດ້ເຮັດແທ່ນດ້ວຍໄມ້ກະຖິນເທດ. ຄວາມຍາວຫນຶ່ງສອກ, ແລະກວ້າງຫນຶ່ງສອກ,
ເປັນຮູບສີ່ຫລ່ຽມຈັດຕຸລັດ ແລະສູງສອງສອກ. ຍອດທີ່ມູມແທ່ນນັ້ນກໍເປັນເນື້ອກັບແທ່ນ.[26]ລາວໄດ້ຫຸ້ມແທ່ນເຄື່ອງຫອມນັ້ນດ້ວຍທອງຄຳບໍຣິສຸດ—
ທັງດ້ານເທິງ, ທັງດ້ານເທິງ, ແລະດ້ານຂ້າງທຸກດ້ານ, ແລະຍອດຂອງແທ່ນ. ລາວຍັງໄດ້ເຮັດຂອບດ້ວຍທອງຄຳອ້ອມຮອບແທ່ນນັ້ນ.
[27]ລາວໄດ້ເຮັດຂໍເກາະທອງຄຳສອງຂໍຕິດໄວ້ໃຕ້ຂອບດ້ານລະຂໍກົງກັນຂວ້າມກັນ. ຂໍເກາະນັ້ນເປັນທີ່ສຳລັບລັບສອດໄມ້ຄານຫາມແທ່ນບູຊາ.
[28]ລາວໄດ້ເຮັດໄມ້ຄານຫາມນັ້ນດ້ວຍໄມ້ກະຖິນເທດ, ແລະລາວໄດ້ຫຸ້ມດ້ວຍທອງຄຳ.[29]ລາວໄດ້ປຸງນ້ຳຫອມເຈີມອັນບໍຣິສຸດ
ແລະປຸງເຄື່ອງຫອມບໍຣິສຸດ, ຕາມສິລະປະຂອງຊ່າງປຸງ.


generated on Tue Jun 17 19:01:42 2025

# 38

[1]ເບຊາເລນໄດ້ເຮັດແທ່ນເຄື່ອງເຜົາບູຊາດ້ວຍໄມ້ກະຖິນເທດ. ຍາວຫ້າສອກ ແລະກວ້າງຫ້າສອກ—ຮູບສີ່ຫລ່ຽມຈັດຕຸລັດ—ແລະສູງສາມສອກ.
[2]ລາວໄດ້ຂະຫຍາຍທັງສີ່ມູມເທິງແທ່ນ ນັ້ນຮູບເຫມືອນເຂົາງົວ. ເຂົາງົວນັ້ນເປັນເນື້ອດຽວກັບແທ່ນ, ລາວໄດ້ຫຸ້ມແທ່ນດ້ວຍທອງແດງ.
[3]ລາວໄດ້ເຮັດເຄື່ອງໃຊ້ທຸກຢ່າງສຳລັບແທ່ນນັ້ນ—ຫມໍ້ສຳລັບໃສ່ຂີ້ເຖົ່າ, ຊວ້ານ, ອ່າງ, ສ້ອມແກະຊີ້ນ, ແລະຖາດຮອງໄຟຕ່າງໆ.
ລາວໄດ້ເຮັດເຄື່ອງໃຊ້ທຸກອັນ ສຳລັບແທ່ນນັ້ນດ້ວຍທອງແດງ.

[4]ລາວໄດ້ເຮັດຕະແກງສຳລັບແທ່ນ, ໃຫ້ຢູ່ໃຕ້ຂອບໃນຮອບແທ່ນບູຊາດ້ວຍທອງແດງ, ແລະໃຫ້ຍື່ນລົງມາຈົນເຖິງປະມານເຄິ່ງແທ່ນ.
[5]ລາວໄດ້ຫລໍ່ຂໍເກາະສີ່ຂໍຕິດທີ່ມູມທັງສີ່ຂອງຕະແກງທອງແດງສຳລັບສອດໄມ້ຄານຫາມ.
[6]ເບຊາເລນໄດ້ເຮັດໄມ້ຄານຫາມດ້ວຍໄມ້ກະຖິນເທດ ແລະຫຸ້ມດ້ວຍທອງແດງ.[7]ລາວໄດ້ສອດໄມ້ຄານຫາມນັ້ນໄວ້ຂໍເກາະຂ້າງແທ່ນທັງສອງດ້ານ,
ສຳລັບຫາມ. ລາວໄດ້ເຮັດແທ່ນນັ້ນດ້ວຍໄມ້ກະດານ, ໃຫ້ຂ້າງໃນເປັນຮູ.
[8]ເບຊາເລນໄດ້ເຮັດອ່າງຂະຫນາດໃຫຍ່ ຖານຮອງອ່າງດ້ວຍທອງແດງ. ລາວໄດ້ສ້າງກະຕ່າອອກຈາກກະຈົກແວ່ນຂອງບັນດາຜູ້ຍິງ
ທີ່ຮັບໃຊ້ຢູ່ທີ່ທາງເຂົ້າຫໍເຕັນນັດພົບ.
[9]ລາວຍັງໄດ້ສ້າງລານຫໍເຕັນ. ໂດຍດ້ານໃຕ້ຂອງລານມີຜ້າບັງລານທີ່ເຮັດດ້ວຍຜ້າປ່ານເນື້ອດີ, ຍາວຫນຶ່ງຮ້ອຍສອກ.[10]ຜ້າບັງລານມີເສົາຊາວຕົ້ນ,
ຖານທອງແດງຊາວຖານ. ມີຂໍເກາະຕ່າງໆຕິດເສົາ, ຮາວຍຶດເສົານັ້ນເຮັດດ້ວຍເງິນ.
[11]ໃນເຊັ່ນດຽວກັນທາງດ້ານເຫນືອໃຫ້ມີຜ້າບັງລານ, ຍາວຫນຶ່ງຮ້ອຍສອກ ກັບເສົາຊາວຕົ້ນ, ຖານທອງແດງຊາວຖານ, ຂໍເກາະຕ່າງໆ ຕິດເສົາ
ແລະ ຮາວຍຶດເສົານັ້ນເຮັດດ້ວຍເງິນ.[12]ຜ້າບັງລານດ້ານຕະເວັນຕົກຍາວຫ້າສິບສອກ, ກັບເສົາສິບຕົ້ນ ແລະຖານຮອງສິບຖານ. ຂໍເກາະ
ແລະຮາວຍຶດເສົາຕ່າງໆ ນັ້ນເຮັດດ້ວຍເງິນ.
[13]ລານຍັງໃຊ້ຜ້າຍາວຫ້າສິບສອກໄປທາງດ້ານຕະເວັນຕົກ.[14]ຜ້າບັງລານດ້ນແຄມທາງເຂົ້າຂ້າງຫນຶ່ງຍາວສິບຫ້າສອກ. ມີເສົາສາມຕົ້ນ
ກັບຖານຮອງເສົາສາມຖານ.[15]ອີກຂ້າງຫນຶ່ງຂອງທາງເຂົ້າຂອງລານ ມີຜ້າບັງລານຍາວສິບຫ້າສອກ, ມີເສົາສາມຕົ້ນ ແລະຖານຮອງສາມຖານ.
[16]ຜ້າບັງລານທັງຫມົດໂດຍຮອບລານນັ້ນເຮັດດ້ວຍຜ້າປ່ານເນື້ອດີ.
[17]ຖານຮອງຮັບເສົານັ້ນເຮັດທອງແດງ. ສ່ວນຂໍຕິດເສົາ ແລະຮາວຍຶດເສົາເຮັດດ້ວຍເງິນ, ແລະຫົວເສົານັ້ນຫຸ້ມດ້ວຍເງິນ.
ເສົາທຸກຕົ້ນຂອງລານມີຮາວຍຶດເສົາເຮັດດ້ວຍເງິນ.[18]ຜ້າກັ້ງທີ່ປະຕູລານນັ້ນຍາວຊາວສອກ. ຜ້າກັ້ງນັ້ນເຮັດຈາກຜ້າເລນິນເນື້ອດີ ສີຟ້າ, ສີມ່ວງ
ແລະດ້າຍສີແດງເຂັ້ມ ຜ້າປ່ານເນື້ອດີດ້າຍຄູ່, ຍາວຊາວສອກ, ຄືຄວາມຍາວຊາວສອກ ແລະສູງຫ້າສອກ, ສະເຫມີກັບຜ້າບັງລານ.
[19]ມີຖານຮອງຮັບເສົາ ສີ່ຖານເປັນທອງແດງ ແລະຂໍແກະເຮັດດ້ວຍເງິນ. ສ່ວນທີ່ຫຸ້ມຫົວເສົາກັບຮາວຍຶດເສົາເຮັດດ້ວຍເງິນ.
[20]ຫລັກຫມຸດທຸກອັນຂອງຫໍເຕັນ ແລະຂອງລານຮອບຫໍເຕັນນັ້ນເຮັດດ້ວຍທອງແດງ.
[21]ຕໍ່ໄປນີ້ຄືສິ່ງຂອງທີ່ໃຊ້ໃນຫໍເຕັນ, ຄືຫໍເຕັນແຫ່ງກົດເກນແຫ່ງພັນທະສັນຍາ, ຊຶ່ງໄດ້ບັນທຶກໄວ້ຕາມຄຳສັ່ງຂອງໂມເຊ.
ເປັນວຽກຂອງຄົນເລວີໃນການດູແລຂອງອີທາມາລູກຊາຍຂອງອາໂຣນປະໂລຫິດ.[22]ເບຊາເລນລູກຊາຍຂອງອູຣີເປັນລູກຊາຍຂອງຮູເຣ,
ຈາກເຜົ່າຢູດາ, ໄດ້ເຮັດທຸກສິ່ງທີ່ພຣະຢາເວໄດ້ຊົງສັ່ງຜ່ານທາງໂມເຊ.[23]ໂອໂຮລຽບ ລູກຊາຍຂອງອາຮີສາມັກ, ຈາກເຜົ່າດານ,
ຜູ້ຮ່ວມງານກັບເບຊາເລນເປັນຊ່າງແກະສະຫລັກ, ເປັນຊ່າງຊຳນານວຽກ, ແລະເປັນຊ່າງແສ່ວໂດຍໃຊ້ດ້າຍຂົນແກະສີຟ້າ, ສີມ່ວງ,
ແລະສີແດງເຂັ້ມ, ແລະຜ້າປ່ານເນື້ອດີ.
[24]ທອງຄຳທັງຫມົດທີ່ໃຊ້ສຳລັບການສ້າງນີ້, ໃນວຽກທັງຫມົດທີ່ກ່ຽວຂ້ອງກັບສະຖານບໍຣິສຸດນັ້ນ—ທອງຄຳທີ່ມາຈາກເຄື່ອງຖວາຍບູຊາໂບກ—
ມີນ້ຳຫນັກຊາວເກົ້າຕະລັນ ແລະ 730 ເຊເຂັນ, ຕາມມາດຕາຊັ່ງນ້ຳຫນັກເຊເຂັນຂອງສະຖານນະມັດສະການ.
[25]ເງິນທີ່ໄດ້ຈາກຊຸມຊົນຈາກການຖວາຍໂບກຫນັກຫນຶ່ງຮ້ອຍຕະລັນ ແລະ 1,775 ເຊເຂ,
ຕາມມາດຕາຊັ່ງນ້ຳຫນັກຂອງສະຖານນະມັດສະການ.[26]ຫລືໂດຍເກັບເງິນຜູ້ຊາຍຄົນລະຫນຶ່ງເບຄາ, ນີ້ຄືເຄິ່ງເຊເຂ,
ຊັ່ງຕາມເຊເຂຂອງສະຖານນະມັດສະການ. ຈຳນວນຕົວເລກນີ້ມີພື້ນຖານຈາກທຸກຄົນທີ່ໄດ້ນັບໄວ້ໃນທະບຽນສຳມະໂນຄົວ,
ຄົນເຫລົ່ານັ້ນທີ່ມີອາຍຸແຕ່ຊາວປີຂຶ້ນໄປ—ລວມທັງຫມົດໄດ້ 603,550 ຄົນ.
[27]ເງິນຫນັກຫນຶ່ງຮ້ອຍຕະລັນນັ້ນ ໃຊ້ຫລໍ່ຖານຮອງຮັບເສົາຂອງສະຖານບໍຣິສຸດ ແລະຖານຂອງຜ້າກັ້ງ; ຖານຮ້ອຍອັນ,
ເງິນຫນຶ່ງຕະລັນໄດ້ຫນຶ່ງຖານ.[28]ຈາກໃນສ່ວນທີ່ເຫລືອຂອງເງິນ 1,775 ເຊເຂ, ເບຊາເລນໄດ້ເຮັດຂໍເກາະສຳລັບເສົາ, ຫຸ້ມຫົວເສົານັ້ນ,
ແລະເຮັດຮາວຍຶດເສົາດ້ວຍ.[29]ທອງແດງຈາກເຄື່ອງຖວາຍບູຊາໂບກຫນັກເຈັດສິບຕະລັນ ແລະ 2,400 ເຊເຂ.
[30]ຈາກສິ່ງເຫລົ່ານີ້ ລາວໄດ້ເຮັດຖານທາງເຂົ້າຫໍເຕັນນັດພົບ, ເຮັດດ້ວຍທອງແດງ, ແລະຕະແກງທອງແດງ,
ແລະເຮັດເຄື່ອງໃຊ້ທັງຫມົດຂອງແທ່ນນັ້ນ,[31]ເຮັດຖານສຳລັບລານ, ຖານທີ່ທາງເຂົ້າລານ, ຫລັກມຸດທຸກໂຕຂອງຫໍເຕັນ,
ແລະເຫລັກຫມຸດທຸກໂຕສຳລັບລານນັ້ນ.

 generated on Tue Jun 17 19:01:42 2025

39 [1]ພວກເຂົາໄດ້ຫຍິບເຄື່ອງແຕ່ງກາຍຢ່າງວິຈິດບັນຈົງດ້ວຍດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ
ສຳລັບນຸ່ງເວລາປະຕິບັດຫນ້າທີ່ໃນສະຖານນະມັດສະການ. ພວກເຂົາໄດ້ເຮັດເຄື່ອງແຕ່ງກາຍຂອງອາໂຣນສຳລັບສວມໃນສະຖານບໍຣິສຸດ,
ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊນັ້ນ.

[2]ເບຊາເລນໄດ້ເຮັດເສື້ອເອໂຟດດ້ວບທອງຄຳ, ດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ແລະຜ້າປ່ານດ້າຍຄູ່ເນື້ອດີ.
[3]ພວກເຂົາຕີຄຳແຜ່ອອກເປັນແຜ່ນບາງໆ ແລະຕັດເປັນເສັ້ນໆ, ເພື່ອຫຍິບເຂົ້າກັບດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ,
ແລະເຂົ້າກັບຜ້າປ່ານເນື້ອດີ, ເປັນວຽກຂອງຊ່າງຝີມືຜູ້ຊຳນານງານ.
[4]ພວກເຂົາໄດ້ເຮັດແຖບຕິດໄວ້ບ່າຂອງເສື້ອເອໂຟດ, ໃຫ້ຕິດກັບມູມດ້ານເທິງສອງມູມ.[5]ສາຍຮັດແອວກໍແສ່ວຢ່າງວິຈິດບັນຈົງເຫມືອນເສື້ອເອໂຟດ;
ແສ່ວເຂົ້າກັນເປັນເນື້ອດຽວກັນກັບເສື້ອເອໂຟດ, ຊຶ່ງເຮັດດ້ວຍຜ້າປ່ານດ້າຍຄູ່ເນື້ອດີ ທີ່ແສ່ວດ້ວຍຄຳ, ດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ,
ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ.
[6]ພວກເຂົາໄດ້ເອົາຫີນອ່ອນຕັດໄວ້, ໃນຕົວເຮືອນທອງຄຳ ຊຶ່ງແກະສະຫລັກຢ່າງມີລວດລາຍລະອຽດ,
ແລະຈາຣຶກເປັນລາຍຊື່ລູກຊາຍທັງສິບສອງຄົນຂອງອິສະຣາເອນ.[7]ເບຊາເລນໄດ້ຕິດຫີນເຫລົ່ານັ້ນໄວ້ແຖບບ່າຂອງເສື້ອເອໂຟດ,
ເພື່ອໃຫ້ຫີນນັ້ນເປັນທີ່ລະນຶກແດ່ພຣະຢາເວ ເຖິງລູກຊາຍສິບສອງຄົນຂອງອິສະຣາເອນ, ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ.
[8]ລາວໄດ້ເຮັດເສື້ອຮັດເອິກ, ເປັນວຽກຂອງຊ່າງສີມືຜູ້ຊຳນານ, ຕົກແຕ່ງເຫມືອນເສື້ອເອໂຟດ. ລາວໄດ້ເຮັດຈາກທອງຄຳ,
ຖັກດ້ວຍດ້າຍຂົນແກະສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ແລະຜ້າປ່ານເນື້ອດີ.[9]ເປັນຮູບສີ່ຫລ່ຽມຈັດຕຸລັດ.
ພວກເຂົາໄດ້ພັບເສື້ອຮັດເອິກເປັນສອງທ່ອນ. ຍາວຫນຶ່ງຄືບ ແລະກວ້າງຫນຶ່ງຄືບ.
[10]ພວກເຂົາໄດ້ຕິດອັນຍະມານີສີ່ແຖວນັ້ນ. ແຖວທີ່ຫນຶ່ງຕິດທັບທິມ, ພອຍສີແດງເຂັ້ມ, ແລະໂກເມນ,[11]ແຖວທີ່ສອງຕິດມໍຣະກົດ, ໄພທູນ,
ແລະເພັດ.[12]ແຖວທີ່ສາມຕິດນິນ, ໂມຣາ, ແລະພອຍສີມ່ວງ.[13]ແຖວທີ່ສີ່ຕິດນິນ, ພອຍສີນ້ຳເຂົ້າ ແລະພອຍສີນ້ຳຕານ.
ພອຍເຫລົ່ານີ້ໄດ້ຕິດໃນຕົວເຮືອນຂອງທອງຄຳ
[14]ພອຍເຫລົ່ານີ້ລຽງຕາມລຳດັບຊື່ຂອງລູກຊາຍສິບສອງຄົນຂອງອິສະຣາເອນ, ລຽງຕາມລຳດັບຊື່. ພວກມັນເຫມືອນແກະສະຫລັກຕຣາປຣະທັບ,
ແຕ່ລະຊື່ຫມາຍເຖິງແຕ່ລະເຜົ່າຂອງສິບສອງເຜົ່າ.[15]ພວກເຂົາໄດ້ເຮັດສາຍຄຳຄ້າຍຖັກກ້ຽວເທິງເສື້ອຮັດເອິກ, ເປັນວຽກຖັກດ້ວຍທອງຄຳບໍຣິສຸດ.
[16]ພວກເຂົາໄດ້ເຮັດເຮືອນຄຳສອງອັນ, ແລະຫູສອງຫູເຮັດດ້ວຍຄຳ, ແລະພວກເຂົາໄດ້ຕິດຫູຄຳສອງຫູໄວ້ທີ່ສອງມູມຂອງເສື້ອຮັດເອິກ.
[17]ພວກເຂົາໄດ້ໃສ່ສາຍຄໍຖັກດ້ວຍທອງຄຳໃນຫູທັງສອງທີ່ມູມເສື້ອຮັດເອິກ.[18]ພວກເຂົາໄດ້ຕິດປາຍຮ້ອຍຖັກສອງຂ້າງນັ້ນ ກັບຕົວເຮືອນທັງສອງ.
ພວກເຂົາໄດ້ຕິດທີ່ແຖບບ່າຂອງເສື້ອເອໂຟດທີ່ດ້ານຫນ້າ.
[19]ພວກເຂົາໄດ້ເຮັດຫູທອງຄຳສອງຫູ ແລະໃສ່ທີ່ມູມດ້ານລຸ່ມທັງສອງຂ້າງຂອງເສື້ອຮັດເອິກ.[20]ພວກເຂົາໄດ້ເຮັດຫູທອງຄຳອີກສອງຫູ
ແລະໃສ່ໄວ້ທີ່ໃຕ້ແຖບບ່າໄຫລ່ດ້ານຫນ້າຂອງເສື້ອເອໂຟດ. ໃກ້ແຂບເຫນືອສາຍຮັດແອວ ຊຶ່ງແສ່ວດ້ວຍສີມືຢ່າງວິຈິດບັນຈົງຂອງເສື້ອເອໂຟດ.
[21]ພວກເຂົາໄດ້ມັດເສື້ອຮັດເອິກນັ້ນຕິດໃສ່ຂໍເກາະຂອງຂໍເສື້ອເອໂຟດດ້ວຍດ້າຍຖັກສີຟ້າ, ເພື່ອໃຫ້ທັບສາຍຮັດແອວ
ຊຶ່ງແສ່ວດ້ວຍສີມືຢ່າງວິຈິດບັນຈົງຂອງເສື້ອເອໂຟດ. ສິ່ງນີ້ກໍເພື່ອທີ່ຈະບໍ່ໃຫ້ເສື້ອຮັດເອິກຫລຸດໄປຈາກເສື້ອເອໂຟດ.
ສິ່ງນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ.
[22]ເບຊາເລນໄດ້ເຮັດເສື້ອຄຸມເຂົ້າກັບຊຸດເສື້ອເອໂຟດ ດ້ວຍຜ້າແສ່ວສີມ່ວງລ້ວນ, ເປັນວຽກຂອງຊ່າງແສ່ວ.
[23]ທີ່ມີຊ່ອງສວມໃສ່ຫົວທາງກາງຂອງເສື້ອນັ້ນ. ໄດ້ຫຍິບຮອບຄໍເພື່ອບໍ່ໃຫ້ຂາດ.[24]ຂອບດ້ານລຸ່ມເສື້ອນັ້ນ, ພວກເຂົາໄດ້ເຮັດເປັນຫມາກພິລາ
ໂດຍໃຊ້ດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ, ແລະຜ້າປ່ານເນື້ອດີ.
[25]ພວກເຂົາໄດ້ເຮັດກະລິງດ້ວຍທອງຄຳບໍຣິສຸດ, ແລະພວກເຂົາໄດ້ຕິດກະລິງລະຫວ່າງຫມາກພິລາ ໂດຍຮອບຂອງລຸ່ມເສື້ອຄຸມ,
ລະຫວ່າງຫມາກພິລານັ້ນມີ—[26]ກະລິງຫນ່ວຍຫນຶ່ງ ແລະຫມາກພິລາຫມາກຫນຶ່ງ, ກະລິງອີກຫນ່ວຍຫນຶ່ງ ແລະ ຫມາກພິລາອີກຫນ່ວຍຫນຶ່ງ—
ດ້ານລຸ່ມເສື້ອຄຸມນັ້ນ ສຳລັບອາໂຣນນຸ່ງເວລາປະຕິບັດຫນ້າທີ່. ສິ່ງນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊທຸກປະການ.
[27]ພວກເຂົາໄດ້ເຮັດເສື້ອຄຸມດ້ວຍຜ້າປ່ານເນື້ອດີ ສຳລັບອາໂຣນ ແລະບັນດາລູກຊາຍຂອງລາວ.[28]ພວກເຂົາໄດ້ເຮັດຜ້າໂພກຫົວ, ຜ້າມັດຫົວ,
ເຮັດເສື້ອດ້ານໃນດ້ວຍຜ້າປ່ານເນື້ອດີ.[29]ແລະເຮັດສາຍຮັດແອວດ້ວຍຜ້າເລນິນເນື້ອດີ ແລະດ້ວຍດ້າຍສີຟ້າ, ສີມ່ວງ, ແລະສີແດງເຂັ້ມ,
ເປັນວຽກສີມືຂອງຊ່າງແສ່ວ. ສິ່ງນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊໄວ້.
[30]ພວກເຂົາໄດ້ເຮັດແຜ່ນມົງກຸດທອງຄຳບໍຣິສຸດ; ພວກເຂົາແກະສະຫລັກທີ່ແຜ່ນມົງກຸດ, ເຫມືອນຕຣາປຣະທັບວ່າ,
"ບໍຣິສຸດແດ່ພຣະຢາເວ."[31]ພວກເຂົາໄດ້ເອົາດ້າຍຖັກສີຟ້າ ມັດໄວ້ເທິງຜ້າໂພກຫົວ. ສິ່ງນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊໄວ້.
[32]ດັ່ງນັ້ນວຽກສຳລັບຫໍເຕັນ, ຫໍເຕັນນັດພົບ, ກໍສຳເລັດລົງ. ປະຊາຊົນອິສະຣາເອນກໍເຮັດຢ່າງນັ້ນທຸກປະການ.
ພວກເຂົາໄດ້ເຮັດຕາມຄຳສັ່ງທຸກຢ່າງທີ່ພຣະຢາເວໄດ້ຊົງສັ່ງໂມເຊ.[33]ພວກເຂົາຈຶ່ງໄດ້ນຳຫໍເຕັນມາໃຫ້ໂມເຊ—ທັງເຕັນ ແລະເຄື່ອງໃຊ້ທຸກອັນ,
ຂໍເກາະ, ໂຄງໄມ້, ກອນ, ເສົາ, ແລະຖານຮອງຮັບເສົາ;[34]ພວກເຂົາໄດ້ຄຸມຫໍເຕັນດ້ວຍຫນັງແກະໂຕຜູ້ຍ້ອມສີແດງ, ຄຸມດ້ວຍຫນັງງົວທະເລ,
ແລະຜ້າກັ້ງສຳລັບບັງຕາ.[35]ຫີບແຫ່ງຄຳພະຍານ, ໄມ້ຄານຫາມ ແລະຝາຫີບໄຖ່ບາບ.
[36]ພວກເຂົາໄດ້ນຳໂຕະ, ເຄື່ອງໃຊ້ທຸກຢ່າງສຳລັບໂຕະນັ້ນ, ແລະເຂົ້າຈີ່.[37]ຄັນຕະກຽງທີ່ເຮັດດ້ວຍທອງຄຳບໍຣິສຸດ ແລະຕະກຽງທີ່ຕັ້ງເປັນແຖວ,
ລວມທັງເຄື່ອງໃຊ້ທັງຫມົດຂອງຄັນຕະກຽງນັ້ນ;[38]ແທ່ນບູຊາຄຳ, ນ້ຳມັນເຈີມ ແລະເຄື່ອງຫອມ; ຜ້າກັ້ງບັງຕາສຳລັບທາງເຂົ້າຫໍເຕັນ.
[39]ແທ່ນບູຊາທອງແດງ ກັບຕະແກງທອງແດງ ແລະໄມ້ຄານຫາມ ແລະເຄື່ອງໃຊ້ທັງຫມົດຂອງແທ່ນ ແລະອ່າງຂະຫນາດໃຫຍ່ກັບຖານຮອງອ່າງ.
[40]ພວກເຂົາໄດ້ນຳຜ້າກັ້ງບັງລານ, ກັບເສົາ ແລະຖານຮອງຮັບເສົາ, ແລະຜ້າກັ້ງສຳລັບທາງເຂົ້າລານ; ເຊືອກ, ແລະຫລັກຫມຸດສຳລັບເຕັນ;
ແລະເຄື່ອງໃຊ້ທັງຫມົດສຳລັບປະຕິບັດຫນ້າທີ່ໆຫໍເຕັນ, ສຳລັບຫໍເຕັນນັດພົບ.
[41]ພວກເຂົາໄດ້ນຳເຄື່ອງແຕ່ງກາຍທີ່ຫຍິບຢ່າງວິຈິດບັນຈົງມາສຳລັບນຸ່ງ ເມື່ອປະຕິບັດຫນ້າທີ່ ໃນສະຖານບໍຣິສຸດ,
ເຄື່ອງແຕ່ງກາຍບໍຣິສຸດສຳລັບອາໂຣນປະໂລຫິດ ແລະບັນດາລູກຊາຍຂອງລາວ,
ສຳລັບພວກເຂົາໃຊ້ນຸ່ງໃນເວລາປະຕິບັດຫນ້າທີ່ໃນຕຳແຫນ່ງປະໂລຫິດ.


generated on Tue Jun 17 19:01:42 2025

42ດັ່ງນັ້ນປະຊາຊົນອິສະຣາເອນກໍເຮັດຕາມທຸກສິ່ງທີ່ພຣະຢາເວໄດ້ຊົງສັ່ງທາງໂມເຊນັ້ນ. 43ໂມເຊຈຶ່ງໄດ້ກວດເບິ່ງວຽກງານທັງປວງ
ແລະເຫັນວ່າວພວກເຂົາໄດ້ສໍາເລັດທຸກຢ່າງ, ແລະ, ເບິ່ງແມ, ພວກເຂົາໄດ້ເຮັດທຸກສິ່ງຕາມພຣະຢາເວໄດ້ຊົງສັ່ງນັ້ນ,
ແລ້ວໂມເຊໄດ້ອວຍພອນພວກເຂົາ.


generated on Tue Jun 17 19:01:42 2025

40 1ແລ້ວພຣະຢາເວໄດ້ກ່າວກັບໂມເຊວ່າ, 2"ໃນທີຫນຶ່ງຂອງເດືອນທີຫນຶ່ງຂອງປີໃຫມ່ ເຈົ້າຕ້ອງຕັ້ງຫໍເຕັນ, ຄືຫໍເຕັນນັດພົບຂຶ້ນ

3ເຈົ້າຕ້ອງວາງຫີບແຫ່ງຄຳພະຍານໃນຫໍເຕັນ, ແລະເຈົ້າຕ້ອງກັ້ນຜ້າກັ້ງບັງຫີບນັ້ນໄວ້. 4ເຈົ້າຕ້ອງນຳໂຕະເຂົ້າມາຕັ້ງໄວ້
ແລະຈັດເຄື່ອງໃຊ້ເທິງໂຕະໄວ້ຕາມບ່ອນຂອງມັນ. ແລ້ວເຈົ້າຕ້ອງນຳຄັນຕະກຽງເຂົ້າມາ ແລະຕັ້ງຕະກຽງໃສ່ຄັນຕະກຽງໃຫ້ເຂົ້າທີ່.
5ເຈົ້າຕ້ອງວາງແທ່ນບູຊາຄຳສຳລັບເຜົາເຄື່ອງຫອມ ຕໍ່ຫນ້າຫີບແຫ່ງຄຳພະຍານ, ແລະເຈົ້າຕ້ອງຕິດຕັ້ງຜ້າກັ້ງທີ່ທາງເຂົ້າຫໍເຕັນ.
6ເຈົ້າຕ້ອງຕັ້ງຫີບແທ່ນເຄື່ອງເຜົາບູຊາໄວ້ດ້ານຫນ້າທາງເຂົ້າຫໍເຕັນ, ເຂົ້າເຕັນນັດພົບ.
7ເຈົ້າຕ້ອງຕັ້ງອ່າງຂະຫນາດໃຫຍ່ໄວ້ລະຫວ່າງຫໍເຕັນນັດພົບກັບແທ່ນບູຊາ ແລະເຈົ້າຕ້ອງໃສ່ນ້ຳໃນອ່າງນັ້ນ.
8ເຈົ້າຕ້ອງເຮັດລານໄວ້ຮອບໆ, ແລະເຈົ້າຕ້ອງຕິດຜ້າກັ້ງບັງຕາໄວ້ທີ່ທາງເຂົ້າລານ. 9ເຈົ້າຕ້ອງເອົານ້ຳມັນເຈີມມາ ແລະເຈີມຫໍເຕັນ
ແລະທຸກໆສິ່ງໃນນັ້ນ. ເຈົ້າຕ້ອງຊຳຣະເຄື່ອງໃຊ້ທຸກຢ່າງ ແລະຂອງຕົກແຕ່ງໃຫ້ບໍຣິສຸດສຳລັບເຮົາ; ແລ້ວຫໍເຕັນນັ້ນຈະບໍຣິສຸດ.
10ເຈົ້າຕ້ອງເຈີມແທ່ນເຄື່ອງເຜົາບູຊາ ແລະເຄື່ອງໃຊ້ທຸກຢ່າງເທິງແທ່ນບູຊາ. ເຈົ້າຕ້ອງຊຳຣະແທ່ນນັ້ນໃຫ້ບໍຣິສຸດສຳລັບເຮົາ
ແລະແທ່ນບູຊານັ້ນຈະບໍຣິສຸດຫລາຍສຳລັບເຮົາ. 11ເຈົ້າຕ້ອງເຈີມທັງອ່າງທອງແດງ ແລະຖານຮອງອ່າງ ແລະອີກທັງຊຳຣະໃຫ້ບໍຣິສຸດສຳລັບເຮົາ.
12ເຈົ້າຈົ່ງນຳອາໂຣນກັບລູກຊາຍທັງຫລາຍຂອງລາວມາທີ່ທາງເຂົ້າຫໍເຕັນນັດພົບ ແລະເຈົ້າຕ້ອງໃຊ້ນ້ຳລ້າງຊຳຣະພວກເຂົາເສຍ.
13ເຈົ້າຈົ່ງສວມເຄື່ອງແຕ່ງກາຍບໍຣິສຸດໃຫ້ອາໂຣນ ແລະຊຳຣະລາວໃຫ້ບໍຣິສຸດສຳລັບເຮົາ, ເຈີມລາວ ແລະ ຊຳຣະຕົວລາວໃຫ້ບໍຣິສຸດ
ເພື່ອລາວຈະເປັນປະໂລຫິດຮັບໃຊ້ເຮົາ.
14ເຈົ້າຈົ່ງນຳລູກຊາຍທັງຫລາຍຂອງລາວມາດ້ວຍ ແລະສວມເສື້ອຄຸມໃຫ້ພວກເຂົາ.
15ເຈົ້າຕ້ອງເຈີມພວກເຂົາເຊັ່ນດຽວກັນກັບທີ່ເຈົ້າເຈີມບິດາຂອງພວກເຂົາ ເພື່ອພວກເຂົາຈະເປັນປະໂລຫິດຮັບໃຊ້ເຮົາ.
ການເຈີມນັ້ນຈະເປັນການເຈີມແຕ່ງຕັ້ງພວກເຂົາໄວ້ເປັນປະໂລຫິດທີ່ມີຜົນຕະຫລອດຊົ່ວຊາດພັນຂອງພວກເຂົາ." 16ນີ້ຄືສິ່ງທີ່ໂມເຊໄດ້ເຮັດຄື;
ລາວໄດ້ເຮັດທຸກສິ່ງຕາມທີ່ພຣະຢາເວໄດ້ສັ່ງລາວ. ລາວໄດ້ເຮັດສິ່ງທັງປວງນີ້.
17ດັ່ງນັ້ນຫໍເຕັນກໍໄດ້ຕັ້ງຂຶ້ນໃນມື້ທີ່ຫນຶ່ງເດືອນທຳອິດປີທີ່ສອງ. 18ໂມເຊໄດ້ຕັ້ງຫໍເຕັນຂຶ້ນ, ວາງຮາກຖານ, ຕັ້ງໂຄງໄມ້, ຕິດໃສ່ກອນ,
ແລະຕັ້ງເສົາຕ່າງໆຂຶ້ນ. 19ລາວໄດ້ກາງສິ່ງທີ່ຈະຄຸມຫໍເຕັນ ແລະເອົາຜ້າເຕັນຄຸມເຫນືອຫໍເຕັນ, ຕາມທີ່ພຣະຢາເວໄດ້ສັ່ງລາວໄວ້.
20ລາວໄດ້ແຜ່ນຫີນແຫ່ງພັນທະສັນຍາໄວ້ໃນຫີບນັ້ນ. ລາວໄດ້ສອດໄມ້ຄານໄວ້ທີ່ຫີບ ແລະວາງຝາຫີບໄຖ່ບາບໄວ້ດ້ານເທິງ.
21ລາວໄດ້ນຳຫີບນັ້ນໄປໄວ້ໃນຫໍເຕັນ. ລາວໄດ້ຕິດຕັ້ງຜ້າກັ້ງເພື່ອບັງຫີບແຫ່ງຄຳພະຍານ, ຕາມທີ່ພຣະຢາເວໄດ້ສັ່ງລາວ.
22ລາວໄດ້ວາງໂຕະໄວ້ໃນຫໍເຕັນນັດພົບ, ທາງທິດເຫນືອຂອງຫໍເຕັນ, ນອກຜ້າກັ້ງ.
23ລາວໄດ້ຈັດລຽງເຂົ້າຈີ່ໃຫ້ເປັນລະບຽບໄວ້ເທິງໂຕະຕໍ່ພຣະເນດພຣະຢາເວ, ຕາມທີ່ພຣະຢາເວໄດ້ຊົງສັ່ງລາວນັ້ນ.
24ລາວໄດ້ຕັ້ງຄັນຕະກຽງໄວ້ໃນເຕັນນັດພົບ, ກົງກັນຂວ້າມກັບໂຕະ, ທາງທິດໃຕ້ຂອງຫໍເຕັນ. 25ລາວໄດ້ໄຕ້ຕະກຽງດ້ານຫນ້າພຣະຢາເວ,
ຕາມທີ່ພຣະຢາເວໄດ້ຊົງສັ່ງລາວ.
26ລາວໄດ້ຕັ້ງແທ່ນບູຊາເຄື່ອງຫອມທອງຄຳໃນຫໍເຕັນນັດພົບຕໍ່ຫນ້າຜ້າກັ້ງ. 27ລາວເຜົາເຄື່ອງຫອມເທິງແທ່ນນັ້ນ, ຕາມທີ່ພຣະຢາເວໄດ້ຊົງສັ່ງລາວ
28ລາວໄດ້ແຂວນຜ້າກັ້ງບັງຕາທີ່ຫນ້າປະຕູຫໍເຕັນ. 29ລາວໄດ້ຕັ້ງແທ່ນເຄື່ອງເຜົາບູຊາໄວ້ທາງເຂົ້າຫໍເຕັນ, ຄືທາງເຂົ້າຫໍເຕັນນັດພົບ.
ລາວໄດ້ຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາພືດເທິງແທ່ນນັ້ນ, ຕາມທີ່ພຣະຢາເວໄດ້ຊົງສັ່ງລາວ. 30ລາວໄດ້ຕັ້ງອ່າງໄວ້ລະຫວ່າງຫໍເຕັນນັດພົບ
ແລະແທ່ນບູຊາ, ແລະລາວໄດ້ໃສ່ນ້ຳໃນອ່າງສຳລັບຊຳຣະລ້າງ.
31ໂມເຊ, ອາໂຣນ, ແລະບັນດາລູກຊາຍຂອງລາວ ໄດ້ລ້າງມື
ແລະລ້າງຕີນຂອງພວກເຂົາດ້ວຍນ້ຳໃນອ່າງ 32ເມື່ອໃດກໍຕາມທີ່ພວກເຂົາຈະເຂົ້າໄປໃນຫໍເຕັນນັດພົບ
ແລະເມື່ອໃດກໍຕາມທີ່ພວກເຂົາຈະຂຶ້ນໄປຍັງແທ່ນບູຊານັ້ນ. ພວກເຂົາກໍຈະຊຳຣະລ້າງຕີນເອງເສຍກ່ອນ, ຕາມທີ່ພຣະຢາເວໄດ້ສັ່ງໂມເຊໄວ້.
33ໂມເຊໄດ້ກັ້ນບໍຣິເວນລານຮອບຫໍເຕັນ ແລະແທ່ນບູຊາ. ລາວໄດ້ກັ້ນຜ້າກັ້ງບັງຕາທີ່ທາງເຂົ້າລານ. ດ້ວຍວິທີນີ້, ໂມເຊກໍເຮັດສຳເລັດຫນ້າທີ່.
34ແລ້ວໃນຂະນະນັ້ນມີເມກມາປົກຄຸມເຕັນນັດພົບໄວ້, ແລະພຣະສະຫງ່າຣາສີຂອງພຣະຢາເວກໍປາກົດຢູ່ເຕັມຫໍເຕັນ.
35ໂມເຊເຂົ້າໄປໃນເຕັນນັດພົບບໍ່ໄດ້ ເພາະເມກປົກຄຸມຢູ່ ແລະ ເພາະພຣະສະຫງ່າຣາສີຂອງພຣະຢາເວກໍຢູ່ເຕັມຫໍເຕັນນັ້ນ.
36ເມື່ອໃດກໍຕາມ ທີ່ເມກນັ້ນລອຍຂຶ້ນຈາກຫໍເຕັນ, ປະຊາຊົນອິສະຣາເອນກໍຈະອອກເດີນທາງຕໍ່ໄປ.
37ແຕ່ຫາກວ່າເມກນັ້ນບໍ່ໄດ້ລອຍຂຶ້ນໄປຈາກຫໍເຕັນ, ແລ້ວປະຊາຊົນກໍຈະບໍ່ອອກເດີນທາງເລີຍ.
ພວກເຂົາຈະຄອຍຖ້າຢູ່ຈົນກວ່າຈະເຖິງມື້ທີ່ເມກນັ້ນລອຍຂຶ້ນໄປ. 38ເພາະເມກຂອງພຣະຢາເວຢູ່ເຫນືອຫໍເຕັນໃນຕອນກາງເວັນ,
ແລະໄຟຂອງພຣະອົງກໍຢູ່ເຫນືອຫໍເຕັນໃນຕອນກາງຄືນ, ປະຊາຊົນຊາວອິສະຣາເອນທັງຫມົດໄດ້ເຫັນສິ່ງນີ້ຕະຫລອດການເດີນທາງ.

# ກົດລະບຽບເລວີ

1 1ພຣະຢາເວຊົງຮຽກເອີ້ນໂມເຊ ແລະກ່າວກັບທ່ານຈາກເຕັນນັດພົບວ່າ, 2" ຈົ່ງບອກຄົນອິດສະຣາເອນ ແລະ ເວົ້າກັບເຂົາວ່າ,
'ເມື່ອຄົນໃດໃນພວກທ່ານນຳເຄື່ອງບູຊາມາຖວາຍພຣະຢາເວນັ້ນ, ໃຫ້ເອົາສັດລ້ຽງ,
ອັນເປັນເຄື່ອງບູຊາຂອງທ່ານມາຈາກຝູງງົວຫລືຝູງແບ້ແກະ.

3ຖ້າເຄື່ອງບູຊາຂອງເຂົາເປັນເຄື່ອງເຜົາບູຊາທີ່ມາຈາກຝູງງົວ, ເຂົາຕ້ອງຖວາຍເປັນໂຕຜູ້ທີ່ບໍ່ມີຕຳຫນິ.
ເຂົາຕ້ອງມາຖວາຍບ່ອນທາງເຂົ້າປະຕູເຕັນນັດພົບ, ເພື່ອເປັນທີ່ຍອມຮັບຕໍ່ພຣະພັກພຣະຢາເວ. 4ໃຫ້ເຂົາວາງມືເທິງຫົວເຄື່ອງເຜົາບູຊານັ້ນ,
ແລ້ວຈະເປັນທີ່ຍອມຮັບແທນໂຕເຂົາເພື່ອລົບລ້າງມົນທິນສຳລັບໂຕເຂົາເອງ.
5ແລ້ວເຂົາຕ້ອງຂ້າງົວນັ້ນຕໍ່ພຣະພັກພຣະຢາເວ. ແລ້ວບັນດາບຸດຂອງອາໂຣນ, ທີ່ເປັນປະໂຣຫິດ,
ກໍນຳເລືອດນັ້ນມາຊິດໃສ່ແທ່ນບູຊາແລະຮອບຂ້າງຂອງເທ່ນບູຊາຢູ່ທາງເຂົ້າເຕັນນັດພົບ. 6ແລະໃຫ້ເຂົາລອກຫນັງເຄື່ອງບູຊານັ້ນອອກ
ແລະຕັດເປັນຕ່ອນໆ.

[7]ແລ້ວບັນດາບຸດຂອງອາໂຣນຊຶ່ງເປັນປະໂຣຫິດຈະຈູດໄຟເທິງແທ່ນບູຊາ ແລະ ຈັດວາງຟືນເທິງໄຟ.[8]ບັນດາລູກຂອງອາໂຣນ, ຊຶ່ງເປັນປະໂຣຫິດ,
ຈະວາງສ່ວນເຫລົ່ານັ້ນ ຊຶ່ງມີສ່ວນຫົວ ແລະໄຂມັນ, ຕາມລໍາດັບໄວ້ເທິງຟືນທີ່ຕິດໄຟຊຶ່ງຢູ່ເທິງແທ່ນບູຊາ.[9]ສ່ວນເຄື່ອງໃນ ແລະຂາຂອງມັນ
ເຂົາຈະລ້າງດ້ວຍນໍ້າ. ແລ້ວປະໂຣຫິດຈຶ່ງເຜົາທຸກຢ່າງເທິງແທ່ນບູຊາໃຫ້ເປັນເຄື່ອງເຜົາບູຊາ. ຊຶ່ງເປັນກິ່ນຫອມສໍາລັບເຮົາ; ແລະ
ເປັນເຄື່ອງບູຊາດ້ວຍໄຟສໍາລັບເຮົາ.
[10]ຖ້າເຄື່ອງບູຊາຂອງເຂົາສໍາລັບເຜົາບູຊານັ້ນມາຈາກຝູງແກະ ຫລື ແບ້, ເປັນແກະໂຕຫນຶ່ງຫລື ແບ້ໂຕຫນຶ່ງ,
ເຂົາຈະຕ້ອງຖວາຍໂຕຜູ້ທີ່ປາສະຈາກການຕໍາຫນິ.[11]ເຂົາຕ້ອງຂ້າສັດທັງຫມົດດ້ານເຫນືອຂອງແທ່ນບູຊາຕໍ່ພຣະພັກພຣະຢາເວ.
ແລ້ວບັນດາບຸດຂອງອາໂຣນ, ຊຶ່ງເປັນປະໂຣຫິດ, ຈະຖອກເລືອດນັ້ນໃສ່ແທ່ນບູຊາທຸກດ້ານ.
[12]ແລ້ວເຂົາຕ້ອງຕັດສັດນັ້ນອອກເປັນສ່ວນໆ ໃຫ້ມີຫົວແລະໄຂຂອງມັນ, ແລະປະໂຣຫິດຈະວາງສ່ວນນັ້ນຕາມລໍາດັບໄວ້ເທິງຟືນເທິງໄຟ,
ທີ່ແທ່ນບູຊາເປັນເຄື່ອງເຜົາບູຊາ,[13]ໃຫ້ເຂົາລ້າງເຄື່ອງໃນກັບຂາດ້ວຍນໍ້າ. ແລະ ປະໂຣຫິດຈະຖວາຍຫມົດທັງໂຕ, ແລະ ເຜົາເທິງແທ່ນບູຊາ.
ມັນເປັນເຄື່ອງເຜົາຖວາຍ, ແລະ ຈະເປັນກິ່ນຫອມສໍາລັບພຣະຢາເວ; ຈະເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະອົງ.
[14]ຖ້າເຄື່ອງບູຊາແດ່ພຣະຢາເວຂອງເຂົານັ້ນເປັນເຄື່ອງເຜົາບູຊາທີ່ມາຈາກນົກ, ເຂົາຈະຕ້ອງນໍານົກເຂົາ ຫລື
ນົກພິລາບຫນຸ່ມມາເປັນເຄື່ອງບູຊາຂອງເຂົາ.[15]ປະໂຣຫິດຈະຕ້ອງນໍາສັດນັ້ນມາທີ່ແທ່ນບູຊາ, ແລ້ວບິດຫົວນົກ ແລະເຜົາເທິງແທ່ນບູຊາ
ແລ້ວເລືອດນົກຈະໄຫລອອກມາທາງຂ້າງແທ່ນບູຊາ.
[16]ເຂົາຈະຕ້ອງເອົາກະເພາະ ແລະ ສິ່ງທີ່ຢູ່ຂ້າງໃນກະເພາະ, ໄປຖິ້ມທາງຂ້າງແທ່ນບູຊາທາງທິດຕາເວັນອອກ, ທີ່ມີຂີ້ເຖົ່າ.[17]ເຂົາຈະຕ້ອງຈີກປີກນົກ,
ໃຫ້ແຍກອອກຈາກກັນເປັນສອງສ່ວນ. ແລ້ວປະໂຣຫິດຈະເຜົາມັນເທິງຟືນທີ່ວາງຢູ່ໄຟທີ່ແທ່ນບູຊາ, ແລະ ນັ້ນຈະເປັນເຄື່ອງເຜົາຖວາຍ, ແລະ
ສິ່ງກິ່ນຫອມສໍາລັບພຣະຢາເວ; ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະອົງ.

 generated on Tue Jun 17 19:01:42 2025

# 2

1ເມື່ອຄົນໃດນຳເຄື່ອງບູຊາເປັນພືດຜົນມາຖວາຍແດ່ພຣະຢາເວ, ເຄື່ອງບູຊາຂອງເຂົາຕ້ອງເປັນແປ້ງຢ່າງດີ,
ແລະເຂົາຈະຖອກນໍ້າມັນລົງເທິງແປ້ງແລະວາງເຄື່ອງຫອມເທິງແປ້ງ.
2ເຂົາຕ້ອງເອົາເຄື່ອງບູຊານັ້ນໄປໃຫ້ບັນດາບຸດຂອງອາໂຣນຊຶ່ງເປັນປະໂຣຫິດ, ແລະປະໂຣຫິດຈະເອົາແປ້ງຢ່າງດີທີ່ມີນໍ້າມັນ,
ແລະວາງເຄື່ອງຫອມເທິງແປ້ງນັ້ນອອກມາກຳມືຫນຶ່ງ. ແລ້ວປະໂຣຫິດຈະເຜົາເຄື່ອງບູຊາເທິງແທ່ນບູຊາໃຫ້ເປັນເຄື່ອງໃຊ້ແທນເຄື່ອງບູຊາ
ນີ້ເປັນກິ່ນຫອມສຳລັບພຣະຢາເວ; ນີ້ເປັນເຄື່ອງບູຊາຖວາຍພຣະຢາເວດ້ວຍໄຟ.
3ເຄື່ອງບູຊາທີ່ເຫລືອນັ້ນຈະເປັນຂອງອາໂຣນແລະລູກຂອງທ່ານນີ້ເປັນສ່ວນທີ່ສັກສິດຫລາຍ
ແດ່ພຣະຢາເວຈາກບັນດາເຄື່ອງບູຊາແດ່ພຣະຢາເວດ້ວຍໄຟ.

4ເມື່ອທ່ານຖວາຍເຄື່ອງບູຊາທີ່ປາສະຈາກເຊື້ອແປ້ງທີ່ອົບໃນເຕົາອົບ,
ຂະຫນົມປັງນັ້ນຈະຕ້ອງເປັນຂະຫນົມປັງທີ່ອ່ອນນຸ້ມທີ່ເຮັດມາຈາກເນື້ອລະອຽດປະສົມນໍ້າມັນ, ຫລື ຂະຫນົມປັງກອບທີ່ປາສະຈາກເຊື້ອແປ້ງ,
ຊຶ່ງທາດ້ວຍນໍ້າມັນ.5ຖ້າເຄື່ອງບູຊາເປັນການອົບດ້ວຍຫມໍ້ເຫລັກແບນ, ຈະຕ້ອງເປັນແປ້ງຢ່າງດີທີ່ປາສະຈາກເຊື້ອແປ້ງທີ່ທາດ້ວຍນໍ້າມັນ.
6ທ່ານຈະຕ້ອງແບ່ງອອກເປັນສ່ວນໆແລ້ວຖອກນໍ້າມັນໃສ່ເທິງນັ້ນ. ນີ້ຄືເຂົ້າຈີ່ຖວາຍບູຊາ7ຖ້າເຄື່ອງຖວາຍບູຊານັ້ນຖືກປຸງແຕ່ງໃນຫມໍ້,
ຈະຕ້ອງເຮັດຈາກຍອດແປ້ງ ແລະ ນໍ້າມັນຢ່າງດີ.
8ທ່ານຕ້ອງນຳເຄື່ອງບູຊາທີ່ເຮັດຈາກສິ່ງເຫລົ່ານັ້ນມາຖວາຍແດ່ພຣະຢາເວ, ແລ້ວຈະຖືກມອບໃຫ້ແກ່ປະໂຣຫິດ, ຜູ້ທີ່ຈະນຳໄປຍັງແທ່ນບູຊາ.
9ແລ້ວປະໂຣຫິດຈະຈັບບາງສ່ວນອອກມາຈາກເຄື່ອງບູຊາ ແລະປະໂລຫິດຈະເຜົາເທິງແທ່ນບູຊາ, ນັ້ນຈະເປັນເຄື່ອງເຜົາບູຊາດ້ວຍໄຟ, ແລະ
ນັ້ນຈະເປັນກິ່ນຫອມສຳລັບພຣະຢາເວ.10ເຄື່ອງບູຊາທີ່ເຫລືອ ຈະຕົກເປັນຂອງອາໂຣນ ແລະ ບັນດາລູກຫລານຂອງທ່ານ.
ນີ້ເປັນສ່ວນສັກສິດຫລາຍແດ່ພຣະຢາເວຈາກບັນດາເຄື່ອງບູຊາແດ່ພຣະຢາເວດ້ວຍໄຟ.
11ເຄື່ອງບູຊາທີ່ທ່ານນຳມາຖວາຍແດ່ພຣະຢາເວຕ້ອງບໍ່ໄສ່ເຊື້ອແປ້ງ, ເພາະທ່ານຈະຕ້ອງເຜົາໂດຍປາສະຈາກເຊື້ອແປ້ງຫລືນໍ້າເຜິ້ງ,
ເພື່ອເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຢາເວ.12ທ່ານຈະຖວາຍຂອງເຫລົ່ານັ້ນທີ່ພຣະຢາເວ ໃຫ້ເປັນເຄື່ອງບູຊາລະຫວ່າງຜົນລະປູກທຳອິດ,
ແຕ່ຂອງເຫລົ່ານັ້ນຈະໃຊ້ເພື່ອໃຫ້ເກີດກິ່ນຫອມເທິງແທ່ນບູຊາ.13ທ່ານຈະຕ້ອງປຸງເຄື່ອງບູຊາແຕ່ລະຢ່າງດ້ວຍເກືອ.
ທ່ານຕ້ອງບໍ່ໃຫ້ເກືອແຫ່ງພັນທະສັນຍາຂອງພຣະເຈົ້າຂອງທ່ານຂາດໄປຈາກເຄື່ອງບູຊາຂອງທ່ານ.
ທ່ານຕ້ອງຖວາຍເຄື່ອງບູຊາຂອງທ່ານພ້ອມດ້ວຍເກືອ.
14ຖ້າທ່ານຖວາຍພືດຜົນເປັນເຄື່ອງບູຊາແຫ່ງຜົນທຳອິດແດ່ພຣະຢາເວ, ໃຫ້ຖວາຍເມັດໃຫມ່ໆ ທີ່ປີ້ງໃສ່ໄຟແລ້ວບົດລະອຽດໃຫ້ເປັນອາຫານ.
15ແລ້ວທ່ານຕ້ອງໃສ່ນໍ້າມັນແລະໃສ່ເຄື່ອງຫອມລົງໄປ. ນັ້ນແມ່ນເຄື່ອງບູຊາທີ່ເປັນພືດຜົນ.16ແລ້ວປະໂຣຫິດຈະເຜົາເມັດທີ່ບົດແລ້ວທັ້ງນໍ້າມັນ
ແລະ ເຄື່ອງຫອມເພື່ອເປັນສ່ວນທີ່ແທ່ນບູຊາ. ນີ້ຄືເຄື່ອງບູຊາດ້ວຍໄຟ ແດ່ພຣະຢາເວ.

 generated on Tue Jun 17 19:01:42 2025

# 3

[1]ຖ້າຄົນໃດທີ່ຖວາຍເຄື່ອງບູຊາຊຶ່ງເປັນສັດບູຊາທີ່ເປັນສັດຈາກຝູງງົວ, ບໍ່ວ່າຈະເປັນໂຕຜູ້ຫລືໂຕເມຍ
ເຂົາຕ້ອງຖວາຍສັດທີ່ປາສະຈາກຕຳຫນິຕໍ່ພຣະພັກພຣະຢາເວ.[2]ໃຫ້ເຂົາວາງມືຂອງເຂົາເທິງຫົວສັດຂອງເຄື່ອງບູຊາຂອງເຂົາ
ແລະຂ້າມັນເສຍທີ່ປະຕູເຕັນນັດພົບ. ແລ້ວບັນດາບຸດຂອງອາໂຣນທີ່ເປັນປະໂຣຫິດຈະຊິດເລືອດຂອງສັດທີ່ດ້ານຂ້າງຮອບແທ່ນບູຊາ.

[3]ສ່ວນຜູ້ທີ່ຖວາຍເຄື່ອງບູຊາສັນຕິບູຊາດ້ວຍໄຟແດ່ພຣະຢາເວ. ໄຂມັນທີ່ຫຸ້ມຫລືຕິດກັບເຄື່ອງໃນ,[4]ແລະ ຫມາກໄຂ່ຫລັງທັງສອງຂ້າງ ແລ
ະໄຂມັນທີ່ຫຸ້ມຊຶ່ງຢູ່ທີ່ບັ້ນແອວ ແລະ ຕັບທັງກ້ອນ - ເຂົາຈະຕ້ອງຕັດທັງຫມົດນີ້ອອກພ້ອມຫມາກໄຂ່ຫລັງ.
[5]ແລ້ວບັນດາບຸດຂອງອາໂຣນຈະເຜົາທັງຫມົດນີ້ເທິງແທ່ນບູຊາພ້ອມກັບເຄື່ອງເຜົາບູຊາ, ຊຶ່ງວາງໄວ້ ເທິງຟືນທີ່ວາງໄວ້ເທິງໄຟ.
ນີ້ຈະເປັນກິ່ນຫອມສຳລັບພຣະຢາເວ; ນີ້ຈະເປັນເຄື່ອງບູຊາທີ່ຖວາຍແດ່ພຣະອົງດ້ວຍໄຟ.
[6]ຖ້າເຄື່ອງບູຊາແຫ່ງສັນຕິບູຊາແດ່ພຣະຢາເວຂອງຄົນນັ້ນເອົາມາຈາກຝູງແບ້ ແກະ ເປັນໂຕຜູ້ຫລືໂຕແມ່ກໍ່ຕາມ,
ເຂົາຈະຖວາຍເຄື່ອງບູຊາທີ່ປາສະຈາກການຕຳຫນິ.[7]ຖ້າຖວາຍລູກແກະເປັນເຄື່ອງບູຊາຂອງເຂົາ, ເຂົາຈະຕ້ອງຖວາຍຕໍ່ພຣະພັກພຣະຢາເວ.
[8]ໃຫ້ເຂົາວາງມືເຂົາເທິງຫົວແທ່ນບູຊາ ແລ້ວຂ້າສັດນັ້ນເຊິ່ງຫນ້າເຕັນນັດພົບ.
ແລ້ວບັນດາບຸດຂອງອາໂຣນຈະຊິດເລືອດຂອງສັດທີ່ດ້ານຂ້າງຮອບແທ່ນບູຊາ.
[9]ສ່ວນຜູ້ທີ່ຖວາຍເຄື່ອງບູຊາແຫ່ງສັນຕິບູຊາໃຫ້ເປັນເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ. ໄຂມັນ, ແລະ
ຫາງທີ່ມີໄຂທັງຫມົດໃຫ້ຕັດຊິດຈົນເຖິງກະດູກສັນຫລັງ, ແລະ ໄຂມັນທີ່ຫຸ້ມເຄື່ອງໃນ ແລະ ໄຂມັນທັງຫມົດທີ່ໃກ້ກັບເຄື່ອງໃນ,[10]ແລະ
ຫມາກໄຂ່ຫລັງທັງສອງຂ້າງ ແລະ ໄຂມັນທີ່ຕິດຢູ່ຊຶ່ງຢູ່ເຊິ່ງບັ້ນແອວ, ແລະ ຕັບທັງສອງກ້ອນ
ເຂົາຈະຕ້ອງເອົາທັງຫມົດນີ້ອອກພ້ອມກັບຫມາກໄຂ່ຫລັງ.[11]ແລ້ວປະໂຣຫິດຈະເຜົາທັງຫມົດນີ້ເທິງແທ່ນບູຊາໃຫ້ເປັນອາຫານເຜົາດ້ວຍໄຟ
ຖວາຍແດ່ພຣະຢາເວ.
[12]ຖ້າເຄື່ອງບູຊາຂອງຄົນນັ້ນເປັນແບ້, ແລ້ວເຂົາຈະຖວາຍສັດນັ້ນຕໍ່ພຣະພັກພຣະຢາເວ.[13]ເຂົາຕ້ອງວາງມືຂອງເຂົາເທິງຫົວແບ້ນັ້ນ
ແລະຂ້າມັນເຊິ່ງຫນ້າເຕັນນັດພົບ. ແລ້ວບັນດາລູກຂອງອາໂຣນຈະຊິດເລືອດຂອງມັນອ້ອມຮອບທຸກດ້ານຂອງແທ່ນບູຊາ.
[14]ຄົນນັ້ນຈະຖວາຍເຄື່ອງບູຊາຂອງເຂົາດ້ວຍໄຟແດ່ພຣະຢາເວ. ເຂົາຈະຕ້ອງເອົາໄຂຂອງມັນທີ່ຫຸ້ມເຄື່ອງໃນ, ແລະ
ໄຂມັນທັງຫມົດທີ່ໃກ້ກັບເຄື່ອງໃນອອກໄປ.
[15]ເຂົາຈະຕ້ອງເອົາຫມາກໄຂ່ຫລັງທັງສອງຂ້າງ ແລະ ໄຂມັນຕິດຢູ່ກັບຫມາກໄຂ່ຫລັງນັ້ນ, ຊຶ່ງຢູ່ບັ້ນແອວ, ແລະ
ຕັບທັງສອງກ້ອນອອກມາພ້ອມກັບຫມາກໄຂ່ຫລັງ.[16]ປະໂຣຫິດຈະເຜົາທັງຫມົດເທິງແທ່ນບູຊາໃຫ້ເປັນອາຫານ, ເຜົາໄຟຊຶ່ງຈະເປັນກິ່ນຫອມ.
ໄຂມັນທັງຫມົດນັ້ນເປັນຂອງພຣະຢາເວ.
[17]ນີ້ເປັນກົດເກນຖາວອນຕະຫລອດຊົ່ວອາຍຸຂອງປະຊາຊົນຂອງເຈົ້າໃນທຸກແຫ່ງທີ່ພວກເຂົາສ້າງບ່ອນພັກອາໄສ,
ວ່າພວກເຈົ້າຕ້ອງບໍ່ກິນໄຂຂອງມັນຫລືເລືອດ."

 generated on Tue Jun 17 19:01:42 2025

4 1ພຣະຢາເວຕັດສັ່ງແກ່ໂມເຊວ່າ, 2"ຈົ່ງບອກປະຊາຊົນອິດສະຣາເອນວ່າ, "ເມື່ອໃດຄົນເຮັດບາບໂດຍບໍ່ເຈດຕະນາ,
ເປັນການເຮັດສິ່ງໃດກໍຕາມທີ່ພຣະຢາເວຊົງບັນຊາບໍ່ໃຫ້ເຮັດ, ແລະ ເຂົາເຮັດສິ່ງໃດກໍຕາມຕ້ອງຫ້າມ, ໃຫ້ເຮັດຕາມດັ່ງຕໍ່ໄປນີ້.
3ຖ້າປະໂຣຫິດໃຫຍ່ໄດ້ເຮັດບາບ ແລະ ນໍາຄວາມຜິດບາບມາສູ່ປະຊາຊົນ,
ໃຫ້ຖວາຍງົວຫນຸ່ມທີ່ປາສະຈາກຕໍາຫນິແດ່ພຣະຢາເວໃຫ້ເປັນເຄື່ອງບູຊາເພື່ອລົບລ້າງສໍາລັບຄວາມບາບທີ່ເຂົາເຮັດ.

4ເຂົາຕ້ອງນໍາງົວມາທາງຫນ້າເຕັນນັດພົບຕໍ່ພຣະພັກພຣະຢາເວ, ແລະ ວາງມືຂອງເຂົາເທິງຫົວງົວນັ້ນ ແລະ ຂ້າງົວນັ້ນຕໍ່ພຣະພັກພຣະຢາເວ.
5ປະໂຣຫິດທີ່ໄດ້ຮັບການເຈີມຈະນໍາເລືອດງົວບາງສ່ວນເຂົ້າໃນເຕັນນັດພົບ.
6ປະໂຣຫິດຈະເອົານິ້ວມືຈຸ່ມເລືອດນັ້ນ ແລະເພີ່ນກໍຊິດເລືອດໃສ່ທາງຫນ້າຜ້າກັ້ງເຈັດເທື່ອຕໍ່ພຣະພັກພຣະຢາເວ, ໃນສະຖານທີ່ສັກສິດທີ່ສຸດ.
7ແລ້ວປະໂຣຫິດຈະເອົາເລືອດບາງສ່ວນໄປທາໃສ່ຈອມຂອງແທ່ນທີ່ໃຊ້ເຜົາເຄື່ອງຫອມຊຶ່ງຢູ່ໃນເຕັນນັດພົບຕໍ່ພຣະພັກພຣະຢາເວ, ແລະ
ເຂົາຈະຖອກເລືອດທີ່ເຫລືອຂອງງົວລົງຖ້ານຂອງແທ່ນເຜົາບູຊາ, ຊຶ່ງຢູ່ທາງເຂົ້າຂອງເຕັນນັດພົບ.
8ເຂົາຈະຕັດເອົາໄຂມັນທັງຫມົດຂອງງົວຜູ້ທີ່ເປັນເຄື່ອງບູຊາລົບລ້າງບາບອອກມາ; ຄືໄຂມັນທີ່ຫຸ້ມເຄື່ອງໃນ; ໄຂມັນທັງຫມົດທີ່ຕິດກັບເຄື່ອງໃນ,
9ຫມາກໄຂ່ຫລັງທັງສອງຂ້າງກັບໄຂມັນຢູ່ໃຕ, ໃກ້ບັ້ນແອວ, ແລະ ຕັບທັງສອງກ້ອນພ້ອມກັບຫມາກໄຂ່ຫລັງ ເຂົາຈະຕັດທັງຫມົດນີ້ອອກຈາກກັນ.
10ເຂົາຈະຕັດອອກຈາກກັນເຊັ່ນດຽວກັບທີ່ເຂົາຕັດອອກຈາກງົວໂຕຜູ້ທີ່ເປັນເຄື່ອງຖວາຍສັນຕິບູຊາ.
ແລ້ວປະໂຣຫິດຈະເຜົາຊິ້ນສ່ວນເຫລົ່ານີ້ເທິງແທ່ນບູຊາ.
11ສ່ວນຫນັງຂອງໂຕງົວຜູ້ ແລະ ຊີ້ນທີ່ເຫລືອ, ພ້ອມກັບຫົວ ແລະ ຂາ, ເຄື່ອງໃນ ແລະ ຂີ້ຂອງມັນ, 12ສ່ວນທີ່ເຫລືອທັງຫມົດນີ້ -
ເຂົາຈະນໍາເອົາໄປນອກຄ້າຍພັກໄປຍັງສະຖານທີ່ພວກເຂົາໄດ້ລ້າງຊໍາລະເພື່ອເຮົາ, ທີ່ຊຶ່ງພວກເຂົາຖອກຂີ້ເທົ່າຖິ້ມ;
ພວກເຂົາຈະເຜົາຊິ້ນສ່ວນເຫລົ່ານັ້ນເທິງກອງຟືນທີ່ນັ້ນ. ພວກເຂົາຕ້ອງເຜົາຊິ້ນສ່ວນເຫລົ່ານັ້ນບ່ອນທີ່ພວກເຂົາຖອກຂີ້ເທົ່າຖິ້ມ.
13ຖ້າຊຸມນຸມຊົນອິດສະຣາເອນທັງຫມົດເຮັດບາບໂດຍບໍ່ເຈດຕະນາ, ແລະ ທັງຊຸມນຸມຊົນບໍ່ຮູ້ໂຕວ່າພວກເຂົາໄດ້ເຮັດບາບ ແລະ
ໄດ້ເຮັດສິ່ງທີ່ພຣະຢາເວຊົງບັນຊາຫ້າມບໍ່ໃຫ້ເຮັດ, ແລະ ຖ້າພວກເຂົາມີຄວາມຜິດ, 14ແລ້ວເມື່ອຄວາມບາບທີ່ເຂົາໄດ້ເຮັດກາຍເປັນທີ່ຮູ້ກັນທົ່ວ,
ເມື່ອນັ້ນທັງຊຸມນຸມຊົນຈະຕ້ອງຖວາຍງົວຫນຸ່ມໃຫ້ເປັນເຄື່ອງບູຊາລົບລ້າງບາບ ແລະ ໃຫ້ເຂົາເອົາງົວນັ້ນມາຕໍ່ຫນ້າເຕັນນັດພົບ.
15ແລ້ວບັນດາຜູ້ອາວຸໂສຂອງຊຸມນຸມຊົນຈະວາງມືຂອງພວກເຂົາເທິງຫົວງົວຜູ້ນັ້ນຕໍ່ພຣະພັກພຣະຢາເວ, ແລະ
ງົວຜູ້ນັ້ນຈະຖືກຂ້າຕໍ່ພຣະພັກພຣະຢາເວ.
16ແລ້ວປະໂຣຫິດຜູ້ໄດ້ຮັບການຊົງເຈີມຈະນໍາເລືອດບາງສ່ວນຂອງງົວໂຕຜູ້ເຂົ້າໄປຍັງເຕັນນັດພົບ, 17ແລະປະໂຣຫິດຈະເອົານິ້ວຂອງເຂົາຈຸ່ມເລືອດ
ແລະຊິດເລືອດນັ້ນໃສ່ຫນ້າຜ້າມ່ານເຈັດຄັ້ງຕໍ່ພຣະພັກພຣະຢາເວ.
18ເຂົາຈະເອົາເລືອດບາງສ່ວນໄປທາເຂົາທັງຫລາຍຂອງແທ່ນບູຊາ ຊຶ່ງຢູ່ໃນເຕັນນັດພົບຕໍ່ພຣະພັກພຣະຢາເວ, ແລະ
ເຂົາຈະຖອກເລືອດທັງຫມົດທີ່ຖ້ານຂອງແທ່ນເຜົາບູຊາ, ຊຶ່ງຢູ່ຫນ້າເຕັນນັດພົບ. 19ເຂົາຈະຕັດເອົາໄຂມັນທັງຫມົດອອກ ແລະ
ເອົາໄປເຜົາເທິງແທ່ນບູຊາ.
20ນີ້ຄືແມ່ນສິ່ງທີ່ເຂົາຈະຕ້ອງເຮັດກັບງົວໂຕນີ້. ເຊັ່ນດຽວກັນທີ່ເຂົາໄດ້ເຮັດກັບງົວໂຕຜູ້ຂອງເຄື່ອງບູຊາລົບລ້າງບາບ,
ດັ່ງນັ້ນເຂົາຈະຕ້ອງເຮັດແບບດຽວກັນກັບງົວຜູ້ໂຕນີ້ ແລະປະໂຣຫິດຈະລົບລ້າງບາບໃຫ້ປະຊາຊົນ ແລະພວກເຂົາຈະໄດ້ຮັບການອະໄພ.
21ເຂົາຈະເອົາງົວໂຕນີ້ອອກນອກຄ້າຍພັກ ແລະເຜົາງົວຜູ້ເຊັ່ນດຽວກັນກັບງົວຜູ້ໂຕທໍາອິດ. ນີ້ແມ່ນເຄື່ອງບູຊາລົບລ້າງບາບສໍາລັບຊຸມນຸມຊົນນັ້ນ.
22ຫາກຜູ້ນໍາຄົນໃດທີ່ເຮັດບາບໂດຍບໍ່ເຈດຕະນາ, ເຮັດສິ່ງໃດສິ່ງຫນຶ່ງໃນຂໍ້ຫ້າມທີ່ພຣະຢາເວພຣະເຈົ້າຂອງເຂົາຊົງບັນຊາຫ້າມບໍ່ໃຫ້ເຮັດ,
ແລະເຂົາມີຄວາມຜິດ. 23ແລ້ວໄດ້ແຈ້ງໃຫ້ເຂົາຮູ້ເຖິງຄວາມບາບຂອງເຂົາທີ່ໄດ້ເຮັດໄປ,
ເຂົາຕ້ອງນໍາແບ້ໂຕຜູ້ທີ່ປາສະຈາກການຕໍາຫນິມາເປັນເຄື່ອງບູຊາຂອງເຂົາ.
24ເຂົາຈະວາງມືເທິງຫົວແບ້ ແລະຂ້າແບ້ໃນສະຖານທີ່ທີ່ພວກເຂົາຂ້າເຄື່ອງເຜົາບູຊາຕໍ່ພຣະພັກພຣະຢາເວ. ນີ້ແມ່ນເຄື່ອງບູຊາລົບລ້າງບາບ.
25ປະໂຣຫິດຈະເອົານິ້ວຈຸ່ມເລືອດຂອງເຄື່ອງບູຊາລົບລ້າງບາບ ແລະ ທາເຈີມໃສ່ເທິງຍອດແທ່ນບູຊາ,
ສ່ວນເລືອດທີ່ເຫລືອເຂົາຈະຖອກເລືອດຂອງແບ້ທີ່ຖ້ານຂອງແທ່ນເຜົາເຄື່ອງບູຊາ.
26ເຂົາຈະເຜົາໄຂມັນທັງຫມົດຢູ່ແທ່ນບູຊາ, ເຊັ່ນດຽວກັນກັບໄຂມັນຂອງເຄື່ອງບູຊາແຫ່ງສັນຕິບູຊາ.
ແລະປະໂຣຫິດຈະເຮັດການໄຖ່ໂທດບາບແທນໃນເລື່ອງຄວາມບາບຂອງເຂົາ, ແລະຜູ້ນັ້ນຈະໄດ້ຮັບການອະໄພ.
27ຖ້າປະຊາຊົນທົ່ວໄປຄົນໃດເຮັດບາບໂດຍບໍ່ເຈດຕະນາ, ແລະເຮັດທຸກສິ່ງທີ່ພຣະຢາເວຊົງບັນຊາບໍ່ໃຫ້ເຮັດ,
ແລະເມື່ອເຂົາຄິດເຖິງຄວາມຜິດຂອງເຂົາ, 28ແລ້ວມີການແຈ້ງໃຫ້ເຂົາຮູ້ສໍາລັບຄວາມບາບທີ່ເຂົາໄດ້ເຮັດ,
ເຂົາກໍຕ້ອງເອົາແບ້ໂຕແມ່ໂຕຫນຶ່ງທີ່ປາສະຈາກຕໍາຫນິ, ເປັນເຄື່ອງບູຊາສໍາລັບຄວາມບາບທີ່ເຂົາໄດ້ເຮັດ.
29ເຂົາຈະວາງມືຂອງເຂົາເທິງຫົວຂອງເຄື່ອງບູຊາເພື່ອລົບລ້າງບາບ ໃນສະຖານທີ່ສໍາລັບການເຜົາເຄື່ອງບູຊາ.
30ປະໂຣຫິດຈະເອົານິ້ວຂອງເຂົາຈຸ່ມເລືອດ ແລະ ທາຍອດແທ່ນບູຊາຢູ່ແຈຂອງແທ່ນ. ເຂົາຈະຖອກເລືອດທີ່ເຫລືອທັງຫມົດຢູ່ແຈຂອງແທ່ນບູຊາ.
31ເຂົາຈະຕ້ອງຕັດເອົາໄຂມັນທັງຫມົດອອກ, ເຊັ່ນດຽວກັນໄຂມັນທີ່ຖືກຕັດອອກຈາກເຄື່ອງສັນຕິບູຊາ.
ປະໂຣຫິດຈະເຜົາໄຂມັນໃຫ້ເກີດເປັນກິ່ນຫອມສໍາລັບພຣະຢາເວ. ປະໂຣຫິດຈະເຮັດການລົບລ້າງບາບສໍາລັບຄົນນັ້ນ,
ເຂົາຈະໄດ້ຮັບການອະໄພ.
32ຫາກຄົນນັ້ນນໍາລູກແກະມາຖວາຍເປັນເຄື່ອງບູຊາລົບລ້າງບາບຂອງເຂົາ, ເຂົາຕ້ອງນໍາລູກແກະໂຕແມ່ ທີ່ປາສະຈາກຕໍາຫນິມາ.
33ເຂົາຈະວາງມືຂອງເຄື່ອງບູຊາລົບລ້າງບາບ ແລະ ຂ້າລູກແກະນັ້ນເປັນເຄື່ອງບູຊາລົບລ້າງບາບຢູ່ສະຖານທີ່ພວກເຂົາຂ້າເຄື່ອງເຜົາບູຊາ.
34ແລ້ວປະໂຣຫິດຈະເອົານິ້ວຂອງເຂົາຈຸ່ມເລືອດຂອງເຄື່ອງບູຊາລົບລ້າງບາບ ແລະທາຍອດແທ່ນຢູ່ແຈຂອງເຄື່ອງເຜົາບູຊາ, ແລະ
ເຂົາຈະຖອກເລືອດລູກແກະທັງຫມົດລົງຖ້ານຂອງເຄື່ອງເຜົາບູຊາ. 35ເຂົາຈະຕັດເອົາໄຂມັນອອກ,
ເຊັ່ນກັນກັບໄຂມັນລູກແກະຂອງເຄື່ອງບູຊາຂອງເຄື່ອງບູຊາແຫ່ງສັນຕິບູຊາທີ່ຖືກຕັດອອກ, ແລະ
ປະໂຣຫິດຈະເຜົາໄຂມັນນັ້ນເທິງເຄື່ອງບູຊາຂອງພຣະຢາເວດ້ວຍໄຟ,
ປະໂຣຫິດຈະເຮັດການລົບລ້າງບາບຂອງຄົນນັ້ນສໍາຫລັບຄວາມບາບທີ່ເຂົາໄດ້ເຮັດ, ແລະຄົນນັ້ນຈະໄດ້ຮັບການອະໄພ.

# 5

1 ຖ້າຄົນໃດເຮັດບາບ ເພາະເຂົາໄດ້ເຫັນບາງສິ່ງບາງຢ່າງຊຶ່ງເຮັດໃຫ້ເຂົາໄດ້ຮັບການຂໍຮ້ອງໃຫ້ໄປເປັນພະຍານ,
ໃນສິ່ງທີ່ເຂົາເຄີຍໄດ້ເຫັນຫລືເຄີຍໄດ້ຍິນກ່ຽວກັບເລື່ອງນັ້ນຕໍ່ເຂົາບໍ່ໄດ້ເປັນພະຍານ, ເຂົາຈະຕ້ອງຮັບຜິດຊອບ.
2 ຫລືຖ້າຄົນໃດແຕະຕ້ອງສິ່ງໃດທີ່ພຣະເຈົ້າຊົງກຳນົດໃຫ້ເປັນມົນທິນ, ບໍ່ວ່າຈະເປັນຊາກສັດປ່າທີ່ເປັນມົນທິນ ຫລື ຊາກສັດລ້ຽງທີ່ໄດ້ຕາຍໄປ, ຫລື
ສັດເລືອຄານ, ແມ້ວ່າຄົນນັ້ນຈະບໍ່ເຈດຕະນາທີ່ຈະແຕະຕ້ອງ, ເຂົາກໍເປັນມົນທິນ ແລະ ມີຄວາມຜິດ.

3 ຫລືຖ້າເຂົາແຕະຕ້ອງຄວາມເປັນມົນທິນຂອງບາງຄົນ, ບໍ່ວ່າຈະເປັນມົນທິນໃດກໍຕາມ, ແລະ ຖ້າເຂົາບໍ່ຮູ້ໂຕ,
ເຂົາກໍຈະມີຄວາມຜິດເມື່ອເຂົາຮູ້ເລື່ອງເຫລົ່ານັ້ນ. 4 ຫລືຖ້າຄົນໃດອອກປາກສາບານວ່າຈະເຮັດຊົ່ວ, ຫລື ເຮັດດີ,
ບໍ່ວ່າຄົນນັ້ນຈະອອກປາກເປັນຄຳອະທິຖານ, ແມ້ວ່າໄດ້ເຮັດຜິດໄປໂດຍບໍ່ຮູ້ຕົວ, ເມື່ອເຂົາຮຽນຮູ້, ເຂົາກໍຈະມີຄວາມຜິດໃນເລື່ອງເຫລົ່ານີ້.
5 ເມື່ອບາງຄົນໄດ້ເຮັດຜິດໃດທີ່ກ່າວມາ, ເຂົາຕ້ອງສາລະພາບບາບທຸກຢ່າງທີ່ເຂົາໄດ້ເຮັດໄປ.
6 ແລ້ວເຂົາຕ້ອງນຳເຄື່ອງບູຊາໄຖ່ບາບມາຖວາຍແດ່ພຣະຢາເວສຳລັບຄວາມບາບທີ່ເຂົາໄດ້ເຮັດ, ໃຫ້ເປັນສັດໂຕແມ່ຈາກຝູງ, ຈະເປັນລູກແກະ
ຫລືແບ້ຫນຶ່ງໂຕ, ເພື່ອເປັນເຄື່ອງບູຊາລົບລ້າງບາບ, ແລະປະໂຣຫິດ ຈະເຮັດການໄຖ່ບາບສຳລັບເຂົາໃນເລື່ອງຄວາມບາບຂອງເຂົານັ້ນ.
7 ຖ້າເຂົາບໍ່ສາມາດທີ່ຈະຊື້ລູກແກະຫນຶ່ງໂຕ, ແລ້ວສາມາດນຳນົກເຂົາສອງໂຕ ຫລື ນົກພິລາບຫນຸ່ມສອງໂຕມາຖວາຍແດ່ພຣະຢາເວ,
ໃຫ້ເປັນເຄື່ອງບູຊາລົບລ້າງບາບ, ແລະ ອີກໂຕຫນຶ່ງສຳລັບເຄື່ອງເຜົາບູຊາ. 8 ເຂົາຕ້ອງນຳມາໃຫ້ປະໂຣຫິດ,
ຜູ້ທີ່ຈະຖວາຍໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບກ່ອນ - ປະໂຣຫິດຈະບິດຫົວນົກ ແຕ່ບໍ່ໃຫ້ຂາດອອກຈາກໂຕ.
9 ແລ້ວປະໂຣຫິດຈະຊິດເລືອດບາງສ່ວນໃສ່ເທິງເຄື່ອງບູຊາ, ແລະເຂົາຈະຖອກເລືອດທີ່ເຫລືອລົງແທ່ນບູຊາ. ນີ້ເປັນເຄື່ອງບູຊາລົບລ້າງບາບ.
10 ແລ້ວເຂົາຕ້ອງຖວາຍນົກໂຕທີສອງເປັນເຄື່ອງເຜົາບູຊາ, ດັ່ງທີ່ກ່າວໄວ້ໃນຄຳສັ່ງນັ້ນ,
ແລະປະໂຣຫິດຈະເຮັດການລົບລ້າງບາບທີ່ເຂົາໄດ້ເຮັດບາບໄປ, ແລະ ຄົນນັ້ນຈະໄດ້ຮັບການອະໄພ.
11 ແຕ່ຖ້າເຂົາບໍ່ສາມາດທີ່ຈະຊື້ນົກເຂົາສອງໂຕຫລືນົກພິລາບຫນຸ່ມສອງໂຕໄດ້, ເຂົາຕ້ອງຖວາຍເຄື່ອງບູຊາເປັນແປ້ງຢ່າງດີມາຫນຶ່ງກິໂລກຣາມ
ມາຖວາຍເປັນການລົບລ້າງບາບຂອງເຂົາ, ເຂົາຕ້ອງບໍ່ໃສ່ນ້ຳມັນຫອມໃດໆລົງໄປ, ເພາະນີ້ເປັນເຄື່ອງບູຊາລົບລ້າງບາບ.
12 ເຂົາຕ້ອງນຳເຄື່ອງບູຊານັ້ນມາໃຫ້ປະໂຣຫິດ, ແລະປະໂຣຫິດຈະເອົາອອກມາຫນຶ່ງກຳມືໃຫ້ເປັນສ່ວນທີ່ແທ່ນບູຊາ,
ແລະເອົາມາເຜົາທີ່ແທ່ນບູຊາ, ໂດຍໂຮຍໃສ່ເຄື່ອງບູຊາຖວາຍດ້ວຍໄຟແດ່ພຣະຢາເວ. ນີ້ເປັນເຄື່ອງບູຊາລົບລ້າງບາບ,
13 ປະໂຣຫິດຈະເຮັດການລົບລ້າງບາບໃດໆ ທີ່ຄົນນັ້ນໄດ້ເຮັດ, ແລະ ຄົນນັ້ນຈະໄດ້ຮັບການອະໄພ.
ແປ້ງທີ່ເຫລືອຈາກການຖວາຍເຄື່ອງບູຊາຈະຕົກເປັນຂອງປະໂຣຫິດ, ເຊັ່ນດຽວກັນກັບເຄື່ອງຖວາຍບູຊາພືດຜົນ.'"
14 ແລ້ວພຣະຢາເວໄດ້ກ່າວແກ່ໂມເຊວ່າ, 15 "ຖ້າຄົນໃດຝ່າຝືນພຣະບັນຊາ ແລະ ເຮັດບາບຕໍ່ສິ່ງທີ່ເປັນຂອງພຣະຢາເວ, ແຕ່ບໍ່ໄດ້ເຈດຕະນາເຮັດ,
ແລ້ວເຂົາຕ້ອງນຳເຄື່ອງບູຊາໄຖ່ຄວາມຜິດບາບມາຖວາຍພຣະຢາເວ. ເຄື່ອງບູຊານີ້ຈະຕ້ອງເປັນແກະໂຕຜູ້ທີ່ປາສະຈາກຕຳຫນິທີ່ເອົາມາຈາກຝູງ;
ຕ້ອງຕີລາຄາແກະນັ້ນເປັນເງິນເຊເຄ - ເປັນເຊເຄຂອງສະຖານນະມັດສະການເພື່ອໃຫ້ເປັນເຄື່ອງບູຊາໄຖ່ຄວາມຜິດ.
16 ເຂົາຕ້ອງເຮັດໃຫ້ພຣະຢາເວຊົງພໍພຣະໄທສຳລັບສິ່ງທີ່ເຂົາໄດ້ເຮັດຜິດໄປໃນເລື່ອງທີ່ກ່ຽວກັບສິ່ງທີ່ບໍລິສຸດສັກສິດ,
ເຂົາຕ້ອງເພີ່ມອີກຫນຶ່ງໃນຫ້າເຂົ້າໄປ ແລະ ມອບໃຫ້ປະໂຣຫິດ. ແລ້ວປະໂຣຫິດຈະເຮັດການລົບລ້າງບາບສຳລັບເຂົາ,
ແລ້ວຄົນນັ້ນຈະໄດ້ຮັບການອະໄພ.
17 ຖ້າຄົນໃດເຮັດບາບ ແລະເຮັດສິ່ງໃດທີ່ພຣະຢາເວຊົງບັນຊາໄວ້ບໍ່ໃຫ້ເຮັດ, ແມ້ວ່າເຂົາບໍ່ຮູ້ໂຕເຂົາກໍຈະມີຄວາມຜິດ ແລະ
ຕ້ອງແບກຮັບຄວາມຜິດຂອງຕົນເອງ. 18 ເຂົາຕ້ອງນຳແກະໂຕຜູ້ທີ່ປາສະຈາກຕຳຫນິອອກຈາກຝູງມາໂຕຫນຶ່ງ,
ຊຶ່ງມີມູນຄ່າເທົ່າກັບເຄື່ອງບູຊາໄຖ່ຄວາມຜິດມາໃຫ້ແກ່ປະໂຣຫິດ. ແລ້ວປະໂຣຫິດຈະເຮັດການລົບລ້າງບາບຂອງເຂົາກ່ຽວກັບຄວາມບາບທີ່ເຂົາ,
ໄດ້ເຮັດໂດຍບໍ່ຮູ້ໂຕ ແລະ ເຂົາຈະໄດ້ຮັບການອະໄພ. 19 ນີ້ເປັນເຄື່ອງບູຊາໄຖ່ຄວາມຜິດ, ເພາະເຂົາມີຄວາມຜິດຕໍ່ພຣະຢາເວຢ່າງແນ່ນອນ."

 generated on Tue Jun 17 19:01:42 2025

6 1ພຣະຢາເວໄດ້ກ່າວແກ່ໂມເຊວ່າ, 2"ຖ້າຄົນໃດເຮັດບາບ ແລະ ຝ່າຝືນພຣະບັນຊາຕໍ່ພຣະຢາເວ, ໂດຍບໍ່ຍອມຄືນສິ່ງຂອງທີ່ຝາກໃຫ້ເຂົາດູແລ,
ຫລື ຖ້າເຂົາໂກງ ຫລື ຂະໂມຍເພື່ອນບ້ານຫລື ຖ້າເຂົາບີບບັງຄັບເພື່ອນບ້ານຂອງເຂົາ, 3ຫລື ເຂົາໄດ້ພົບບາງສິ່ງທີ່ເພື່ອນບ້ານເຮັດເສຍໄປນັ້ນ
ແລ້ວວ່າຕົນບໍ່ເຫັນ, ຫລື ເລື່ອງທີ່ປະຊາຊົນເຮັດບາບທຳນອງນີ້. 4ແລ້ວຕໍ່ມາຖ້າເຂົາໄດ້ເຮັດບາບ ແລະ ມີຄວາມຜິດ,
ເຂົາຈະຕ້ອງຄືນອັນໃດກໍຕາມທີ່ເຂົາໄດ້ລັກມາ ຫລືບີບບັງຄັບເອົາມາ ຫລື ຍຶດເອົາສິ່ງທີ່ຝາກໄວ້ກັບເຂົາ ຫລືເຄື່ອງທີ່ຫາຍໄປທີ່ເຂົາໄດ້ພົບ.

5ຫລື ຖ້າເຂົາມີການຕົວະໃນເລື່ອງໃດເລື່ອງຫນຶ່ງ, ໃນວັນທີ່ພົບວ່າເຂົາມີຄວາມຜິດເຂົາຕ້ອງຄືນໃຫ້ທັງຫມົດ ແລະ
ເພີ່ມຫນຶ່ງໃນຫ້າແກ່ຄົນທີ່ເປັນເຈົ້າຂອງ. 6ແລ້ວເຂົາຕ້ອງນຳເຄື່ອງບູຊາໄຖ່ຄວາມຜິດມາຖວາຍພຣະຢາເວ:
ໂດຍນຳແກະຜູ້ທີ່ປາສະຈາກຕຳຫນິເອົາມາຈາກຝູງ ຊຶ່ງມີຄ່າເປັນທີ່ຍອມຮັບມາມອບໃຫ້ແກ່ປະໂຣຫິດ, ໃຫ້ເປັນເຄື່ອງບູຊາໄຖ່ຄວາມຜິດ.
7ປະໂຣຫິດຈະເຮັດການລົບລ້າງບາບສຳລັບເຂົາຕໍ່ພຣະພັກພຣະຢາເວ ແລະ ເຂົາຈະໄດ້ຮັບການອະໄພໃນສິ່ງໃດກໍຕາມທີ່ເຂົາໄດ້ເຮັດຜິດໄປ."
8ແລ້ວພຣະຢາເວໄດ້ກ່າວແກ່ໂມເຊວ່າ, 9"ຈົ່ງສັ່ງອາໂຣນ ແລະ ບັນດາລູກຊາຍຂອງເຂົາວ່າ, "ນີ້ຄືພຣະບັນຍັດເລື່ອງເຄື່ອງເຜົາບູຊາ:
ເຄື່ອງເຜົາບູຊາຈະຕ້ອງເຜົາເທິງແທ່ນບູຊາຕະຫລອດຄືນຈົນຮອດເຊົ້າ, ແລະ ຈະຕ້ອງໃຫ້ໄຟຂອງແທ່ນບູຊາລຸກຢູ່ສະເຫມີ.
10ປະໂຣຫິດຈະສວມຊຸດຜ້າປ່ານຂອງເຂົາ, ແລະເຂົາຈະສວມຊຸດຊັ້ນໃນຂອງເຂົາເປັນຜ້າປ່ານດ້ວຍ,
ເຂົາຈະຕ້ອງຕັກເອົາຂີ້ເຖົ່າທີ່ເຫລືອຈາກການເຜົາບູຊາເທິງແທ່ນບູຊາ, ແລະເຂົາຈະເອົາຂີ້ເຖົ່າໃສ່ທາງຂ້າງແທ່ນບູຊາ,
11ປະໂຣຫິດຈະຕ້ອງຖອດເສື້ອຊຸດຂອງເຂົາອອກແລະປ່ຽນໃສ່ອີກຊຸດຫນຶ່ງ ເພື່ອເອົາຂີ້ເຖົ່າໄປທາງນອກຄ້າຍໄປຍັງສະຖານທີ່ສະອາດແລ້ວ.
12ຢ່າໃຫ້ໄຟດັບ ແລະ ປະໂຣຫິດຈະເຜົາຟືນເທິງແທ່ນບູຊາໃນທຸກເຊົ້າ, ແລະ ເຂົາຕ້ອງຈັດວາງເຄື່ອງບູຊາຕາມທີ່ໄດ້ກຳນົດໄວ້, ແລະ
ເຂົາຕ້ອງເຜົາໄຂມັນຂອງສັນຕິບູຊາເທິງແທ່ນບູຊາ. 13ໄຟຈະຕ້ອງລຸກໄຫມ້ໃນແທ່ນບູຊາຢູ່ຢ່າງຕໍ່ເນື່ອງ ແລະ ໄຟຕ້ອງບໍ່ດັບ.
14ນີ້ເປັນບັນຍັດສຳລັບເຄື່ອງບູຊາ. ບັນດາລູກຊາຍຂອງອາໂຣນຈະຖວາຍເຄື່ອງບູຊາແດ່ພຣະຢາເວຕໍ່ຫນ້າແທ່ນບູຊາ.
15ປະໂຣຫິດຈະເອົາແປ້ງຢ່າງດີພ້ອມກັບນ້ຳມັນ ແລະ ເຄື່ອງຫອມທີ່ເປັນເຄື່ອງພືດຜົນບູຊາ ແລະ
ປະໂຣຫິດຈະເຜົາເທິງແທ່ນບູຊາເພື່ອໃຫ້ເກີດກິ່ນຫອມປຽບເປັນຕົວແທນການຖວາຍບູຊາ.
16ແລ້ວອາໂຣນແລະບັນດາບຸດຂອງເຂົາຈະກິນອາຫານຫຍັງກໍຕາມທີ່ເຫລືອຈາກເຄື່ອງບູຊາ,
ຈະຕ້ອງກິນໂດຍປາສະຈາກເຊື້ອແປ້ງພາຍໃນສະຖານທີ່ບໍຣິສຸດສັກສິດ; ພວກເຂົາຈະກິນອາຫານຢູ່ລານໃນເຕັນນັດພົບ.
17ແລະຈະຕ້ອງປີ້ງໂດຍບໍ່ໃສ່ເຊື້ອແປ້ງ, ເຮົາໄດ້ໃຫ້ສ່ວນນີ້ເປັນສ່ວນຂອງເຄື່ອງບູຊາຂອງເຮົາທີ່ຖວາຍດ້ວຍໄຟ. ເປັນສິ່ງທີ່ບໍລິສຸດສັກສິດທີ່ສຸດ,
ເປັນເຄື່ອງບູຊາລ້າງບາບ ແລະເປັນເຄື່ອງບູຊາໄຖ່ຄວາມຜິດ. 18ໃຫ້ເປັນກົດເກນຕະຫລອດທຸກຊົ່ວອາຍຸຂອງປະຊາຊົນຂອງເຈົ້າ,
ຊາຍໃດທີ່ເປັນເຊື້ອສາຍຂອງອາໂຣນຈະກິນໄດ້ ເພາະເປັນສ່ວນແບ່ງຂອງເຂົາຊຶ່ງແບ່ງມາຈາກເຄື່ອງບູຊາຂອງພຣະຢາເວທີ່ຖວາຍດ້ວຍໄຟ.
ໃຜກໍຕາມທີ່ແຕະຕ້ອງຂອງຖວາຍເຫລົ່ານັ້ນກໍຈະກາຍເປັນຄົນບໍຣິສຸດ."
19ແລ້ວພຣະຢາເວໄດ້ຕັດແກ່ໂມເຊອີກວ່າ, 20"ນີ້ຄືເຄື່ອງບູຊາສຳລັບອາໂຣນ ແລະບັນດາລູກຊາຍຂອງເຂົາ,
ທີ່ຈະຕ້ອງຖວາຍແດ່ພຣະຢາເວເມື່ອລູກຊາຍແຕ່ລະຄົນໄດ້ຮັບການເຈີມ:
ໃຫ້ເອົາແປ້ງເຂົ້າຢ່າງດີສອງກິໂລກຣາມເຊັ່ນດຽວກັນກັບເຄື່ອງພືດຜົນບູຊາທີ່ຖວາຍປະຈຳ, ຕອນເຊົ້າຖວາຍເຄິ່ງຫນຶ່ງ
ຕອນແລງຖວາຍອີກເຄິ່ງຫນຶ່ງ.
21ໃຫ້ປົ່ນແປ້ງກັບນ້ຳມັນ ແລ້ວທອດໃນຫມໍ້ເມື່ອສຸກແລ້ວ.
ຈົ່ງເອົາເຂົ້າມາເປັນຕ່ອນເຈົ້າຈະຖວາຍເຄື່ອງພືດຜົນບູຊາເພື່ອເກີດກິ່ນຫອມສຳຫລັບພຣະຢາເວ.
22ລູກຂອງມະຫາປະໂຣຫິດຈະເປັນມະຫາປະໂຣຫິດຄົນໃຫມ່ຈາກທ່າມກາງບັນດາລູກຊາຍຂອງເຂົາຈະຕ້ອງຖວາຍເຄື່ອງບູຊານີ້ໃຫ້ເປັນຄຳສັ່ງໄວ້ຕະຫລອດໄປ.
ເຄື່ອງບູຊາທັງຫມົດນັ້ນຈະຕ້ອງເຜົາຖວາຍແດ່ພຣະຢາເວ. 23ເຄື່ອງບູຊາປະໂຣຫິດທັງຫມົດຈະຕ້ອງເຜົາຈົນຫມົດຈະຕ້ອງບໍ່ເອົາມາກິນ."
24ພຣະຢາເວໄດ້ຕັດສັ່ງແກ່ໂມເຊວ່າ, "25ຈົ່ງບອກອາໂຣນວ່າ ຈົ່ງບອກອາໂຣນແລະບັນດາລູກຊາຍຂອງເຂົາວ່າ
"ນີ້ເປັນກົດບັນຍັດເລື່ອງເຄື່ອງບູຊາລົບລ້າງບາບ: ເຄື່ອງບູຊາລົບລ້າງບາບຈະຕ້ອງຖືກຂ້າໃນບໍລິເວນທີ່ໃຊ້ຂ້າເຄື່ອງເຜົາບູຊາຕໍ່ພຣະພັກພຣະຢາເວ.
ນີ້ເປັນສິ່ງບໍຣິສຸດທີ່ສຸດ. 26ປະໂຣຫິດຜູ້ຖວາຍເຄື່ອງບູຊາລົບລ້າງບາບ ຈະກິນເຄື່ອງບູຊາເຫລົ່ານັ້ນໄດ້.
ແລະຈະຕ້ອງກິນອາຫານໃນສະຖານທີ່ບໍຣິສຸດສັກສິດບ່ອນເດີ່ນຂອງເຕັນນັດພົບ.
27ແມ່ນຫຍັງກໍຕາມທີ່ຖືກຕ້ອງເນື້ອຂອງເຄື່ອງບູຊານັ້ນກໍຈະກາຍເປັນສິ່ງບໍຣິສຸດ, ຖ້າເຄື່ອງນຸ່ງຜືນໃດຖືກເລືອດສັດເຈົ້າຈະຕ້ອງຊັກລ້າງ,
ບ່ອນສ່ວນທີ່ມີເລືອດນັ້ນ, ໃນສະຖານທີ່ບໍຣິສຸດ. 28ແຕ່ຫມໍ້ດິນຕົ້ມທີ່ໃຊ້ຕົ້ມເຄື່ອງບູຊານັ້ນຈະຕ້ອງທຸບ. ຖ້າຕົ້ມໃນຫມໍ້ທອງເຫລືອງ,
ຈະຕ້ອງຂັດແລະລ້າງໃຫ້ສະອາດດ້ວຍນ້ຳ.
29ຊາຍທຸກຄົນໃນທ່າມກາງພວກປະໂຣຫິດສາມາດກິນເຄື່ອງບູຊາບາງສ່ວນໄດ້ເພາະເປັນສິ່ງທີ່ບໍຣິສຸດທີ່ສຸດ.
30ແຕ່ເຄື່ອງບູຊາລົບລ້າງບາບທີ່ນຳເຂົ້າມາໃນເຕັນນັດພົບເພື່ອເຮັດການລ້າງບາບໃນສະຖານທີ່ສັກສິດແລ້ວ ຫ້າມກິນຊີ້ນສັດນັ້ນ.
ແຕ່ໃຫ້ເຜົາໄຟເສຍ.

 generated on Tue Jun 17 19:01:42 2025

# 7

[1]ນີ້ເປັນກົດເກນຂອງເຄື່ອງບູຊາໄຖ່ຄວາມຜິດນີ້ແມ່ນເປັນສິ່ງທີ່ບໍລິສຸດທີ່ສຸດ.
[2]ພວກເຂົາຕ້ອງຂ້າເຄື່ອງບູຊາໄຖ່ຄວາມຜິດບາບໃນສະຖານທີ່ຕຽມໄວ້ສຳລັບຂ້າເຄື່ອງບູຊາ,
ແລະພວກເຂົາຕ້ອງຊິດເລືອດຂອງເຄື່ອງບູຊາອ້ອມຮອບເຄື່ອງເຜົາບູຊາທຸກດ້ານ.[3]ໄຂມັນໃນເຄື່ອງບູຊານັ້ນຈະຕ້ອງຖວາຍທັງຫມົດ:
ມີໄຂມັນທີ່ຫາງ, ໄຂມັນທີ່ຫຸ້ມເຄື່ອງໃນ,[4]ຫມາກໄຂ່ຫລັງທັງສອງຂ້າງ, ແລະ ໄຂມັນທີ່ຫຸ້ມຕັບ, ພ້ອມກັບຫມາກໄຂ່ຫລັງທັງຫມົດນີ້ຕ້ອງເອົາອອກ.

[5]ປະໂຣຫິດຕ້ອງເຜົາຊີ້ນສ່ວນເຫລົ່ານັ້ນເທິງແທ່ນບູຊາທີ່ຖວາຍດ້ວຍໄຟແດ່ພຣະຢາເວ. ນີ້ເປັນເຄື່ອງບູຊາໄຖ່ຄວາມຜິດ.
[6]ຜູ້ຊາຍທຸກຄົນໃນຖ່າມກາງປະໂຣຫິດສາມາດກິນສ່ວນຂອງເຄື່ອງບູຊານີ້ໄດ້.
ເຄື່ອງບູຊາຕ້ອງກິນໃນສະຖານທີ່ບໍລິສຸດເນື່ອງຈາກເປັນສິ່ງບໍລິສຸດທີ່ສຸດ.
[7]ເຄື່ອງບູຊາລົບລ້າງບາບກໍເຊັ່ນດຽວກັນເຄື່ອງບູຊາໄຖ່ຄວາມຜິດ. ທັງສອງຢ່າງນີ້ໃຊ້ກົດເກນແບບດຽວກັນ.
ເຄື່ອງບູຊາເຫລົ່ານັ້ນຕົກເປັນຂອງປະໂຣຫິດຜູ້ເຮັດການລ້າງບາບດ້ວຍເຄື່ອງບູຊາ.
[8]ປະໂຣຫິດທີ່ຖວາຍເຄື່ອງເຜົາບູຊາຂອງໃຜກໍຕາມສາມາດເກັບຫນັງຂອງໃຜກໍຕາມທີ່ແທ່ນບູຊານັ້ນໄວ້ສຳລັບຕົນເອງໄດ້.
[9]ເຄື່ອງບູຊາທຸກຢ່າງທີ່ອົບໃນເຕົາອົບ,
ແລະເຄື່ອງບູຊາແບບດຽວກັນທີ່ເຮັດໃຫ້ສຸກໃນຫມໍ້ກະທະຫລືໃນເຫລັກປີ້ງຈະຕົກເປັນຂອງປະໂຣຫິດຜູ້ທີ່ໄດ້ຖວາຍເຄື່ອງບູຊານັ້ນ.
[10]ເຄື່ອງບູຊານັ້ນແບບແຫ້ງ ຫລື ແບບປະສົມກັບກັບນໍ້າມັນ, ຈະຕົກເປັນເຊື້ອສາຍຂອງອາໂຣນທັງຫມົດໂດຍເທົ່າທຽມກັນ.
[11]ນີ້ເປັນກົດເກນຂອງເຄື່ອງບູຊາແຫ່ງສັນຕິບູຊາທີ່ປະຊາຊົນຈະນຳມາຖວາຍແດ່ພຣະຢາເວ.[12]ຜູ້ໃດຖວາຍເຄື່ອງບູຊາເປັນການຂອບພະຄຸນ,
ເຂົາຕ້ອງຖວາຍເຄື່ອງບູຊາທີ່ເປັນເຂົ້າຈີ່ທີ່ເຮັດຂຶ້ນໂດຍບໍ່ໃສ່ເຊື້ອແປ້ງແຕ່ປະສົມນໍ້າມັນ ຫລືເຄັກທີ່ເຮັດໂດຍບໍ່ໃສ່ເຊື້ອແປ້ງ,
ແຕ່ແຜ່ເປັນແຜ່ນທາດ້ວຍນໍ້າມັນ ແລະ ເຄັກທີ່ເຮັດຈາກແປ້ງຢ່າງດີປະສົມນໍ້າມັນ.
[13]ແລະເມື່ອເປັນໄປຕາມຈຸດປະສົງແຫ່ງການຖວາຍຂອບພະຄຸນ, ເຂົາຖວາຍເຂົ້າຈີ່ທີ່ເຮັດຂຶ້ນໂດຍໃສ່ເຊື້ອແປ້ງ
ຮ່ວມກັບເຄື່ອງບູຊາແຫ່ງສັນຕິບູຊາ.[14]ເຂົາຕ້ອງຖວາຍຢ່າງລະກ້ອນຂອງເຄື່ອງບູຊາເຫລົ່ານີ້ໃຫ້ເປັນເຄື່ອງບູຊາແດ່ພຣະຢາເວ.
ເຄື່ອງບູຊາຕົກເປັນຂອງປະໂຣຫິດຜູ້ທີ່ເອົາເລືອດສັດໄປຊິດໃສ່ແທ່ນບູຊາ.
[15]ຜູ້ທີ່ຖວາຍສັນຕິບູຊາເພື່ອເປັນການຖວາຍຂອບພະຄຸນຕ້ອງກິນເນື້ອຂອງເຄື່ອງບູຊາທີ່ເຂົາຖວາຍໃນວັນທີ່ເຂົາຖວາຍເຄື່ອງບູຊາ.
ເຂົາຕ້ອງບໍ່ເຫລືອໄວ້ຈົນຮອດຕອນເຊົ້າ[16]ແຕ່ຖວາຍເຄື່ອງບູຊາທີ່ເຂົາເຮັດຖວາຍມີຈຸດປະສົງເພື່ອການປະຕິຍານຕົນ
ຫລືມີຈຸດປະສົງໂດຍການຖວາຍໂດຍສະຫມັກໃຈ, ຊີ້ນນັ້ນຕ້ອງກິນໃນວັນທີ່ເຂົາຖວາຍເຄື່ອງບູຊາຂອງເຂົາ,
ແຕ່ສິ່ງໃດທີ່ເຫລືອນັ້ນໃຫ້ກິນໃນມື້ຖັດມາໄດ້.
[17]ຢ່າງໃດກໍດີ, ແຕ່ຖ້າຊີ້ນຂອງເຄື່ອງບູຊາເຫລືອຮອດມື້ທີສາມໃຫ້ເຜົາເສຍ.[18]ຖ້າຊີ້ນຂອງເຄື່ອງບູຊາໃດທີ່ມາຈາກສັນຕິບູຊາຖືກກິນໃນວັນທີສາມ,
ຈະບໍ່ເປັນທີ່ຍອມຮັບ, ແລະ ເຊື່ອມເສຍຊື່ສຽງຂອງຜູ້ຖວາຍເຄື່ອງບູຊາ. ເປັນສິ່ງທີ່ຫນ້າລັງກຽດ, ແລະຜູ້ທີ່ກິນຊີ້ນນັ້ນຈະແບກຮັບຄວາມຜິດບາບ
ແຫ່ງການເຮັດບາບຂອງເຂົາ.
[19]ຫ້າມກິນຊີ້ນໃດໆທີ່ໄປປະສົມກັບສິ່ງທີ່ບໍ່ສະອາດ. ຕ້ອງເຜົາເສຍ. ສ່ວນຊີ້ນສ່ວນອື່ນນັ້ນ, ໃຜກໍຕາມທີ່ສະອາດກໍສາມາດກິນໄດ້.
[20]ແຕ່ຄົນໃດບໍ່ສະອາດທີ່ກິນຊີ້ນຈາກເຄື່ອງບູຊາແຫ່ງສັນຕິບູຊາທີ່ເປັນຂອງພຣະຢາເວ ຄົນນັ້ນຕ້ອງຖືກຕັດອອກຈາກປະຊາຊົນຂອງເຮົາ.
[21]ຖ້າຜູ້ໃດແຕະຕ້ອງສິ່ງທີ່ບໍ່ສະອາດໃດຂອງມະນຸດ ຫລືສັດປ່າທີ່ບໍ່ສະອາດ, ຫລືຈາກບາງຢ່າງທີ່ບໍ່ສະອາດແລະຫນ້າລັງກຽດ,
ແລະຖ້າເຂົາມາກິນຊີ້ນເຄື່ອງບູຊາແຫ່ງສັນຕິບູຊາທີ່ເປັນຂອງພຣະຢາເວ, ຄົນນັ້ນຕ້ອງຖືກຕັດອອກຈາກປະຊາຊົນຂອງເຂົາເອງ.
[22]ແລ້ວພຣະຢາເວສັ່ງແກ່ໂມເຊວ່າ,[23]" ຈົ່ງບອກແກ່ປະຊາຊົນອິດສະຣາເອນວ່າ,' ເຈົ້າຕ້ອງບໍ່ກິນໄຂມັນຂອງງົວ ຫລື ແກະຫລືແບ້.
[24]ໄຂມັນຂອງສັດທີ່ຕາຍນອກຈາກການຖວາຍເປັນເຄື່ອງບູຊາ ຫລືໄຂມັນຂອງສັດທີ່ ຖືກສັດປ່າກັດກິນ, ອາດຈະເອົາໄປໃຊ້ເພື່ອຈຸດປະສົງອື່ນໄດ້,
ແຕ່ຫ້າມບໍ່ໃຫ້ພວກເຈົ້າກິນ.
[25]ໃຜກໍຕາມທີ່ກິນໄຂມັນຂອງສັດທີ່ຜູ້ຄົນສາມາດເອົາມາຖວາຍດ້ວຍໄຟແດ່ພຣະຢາເວ, ບຸກຄົນນັ້ນຕ້ອງຖືກຕັດອອກຈາກປະຊາຊົນຂອງເຂົາ.
[26]ພວກເຂົາຕ້ອງບໍ່ກິນເລືອດໃດໆທັງຫມົດ ບໍ່ວ່າຢູ່ໃນເຮືອນຂອງພວກເຈົ້າ, ບໍ່ວ່າເລືອດນັ້ນຈະມາຈາກນົກຫລືສັດ.
[27]ໃຜກໍຕາມທີ່ກິນເລືອດໃດໆກໍຕາມ ຄົນນັ້ນຕ້ອງຖືກຕັດອອກຈາກປະຊາຊົນຂອງເຂົາ."
[28]ດັ່ງນັ້ນພຣະຢາເວກ່າວແກ່ໂມເຊວ່າ,[29]ຈົ່ງບອກແກ່ປະຊາຊົນອິດສະຣາເອນວ່າ, "ຜູ້ທີ່ຖວາຍເຄື່ອງບູຊາແຫ່ງສັນຕິບູຊາແດ່ພຣະຢາເວ
ຕ້ອງນຳເຄື່ອງບູຊາຂອງເຂົາມາຖວາຍແດ່ພຣະຢາເວ ຕ້ອງນຳສ່ວນຂອງເຄື່ອງບູຊາມາຖວາຍແດ່ພຣະຢາເວ.
[30]ເຄື່ອງຖວາຍດ້ວຍໄຟແດ່ພຣະຢາເວ. ເຂົາຕ້ອງນຳມາຖວາຍດ້ວຍມືຂອງຕົນເອງ. ເຂົາຕ້ອງນຳໄຂມັນມາພ້ອມກັບຊີ້ນຫນ້າເອິກ
ແລ້ວເອົາຊີ້ນຫນ້າເອິກນັ້ນໃຫ້ເປັນເຄື່ອງບູຊາຖວາຍຕໍ່ພຣະພັກພຣະຢາເວ.
[31]ປະໂຣຫິດຕ້ອງເຜົາໄຂມັນນັ້ນເທິງແທ່ນບູຊາ, ແຕ່ຊີ້ນຫນ້າເອິກນັ້ນຈະຕົກເປັນຂອງອາໂຣນ ແລະ ເຊື້ອສາຍຂອງເຂົາ.
[32]ເຈົ້າຕ້ອງມອບຂາຂວາດ້ານຫລັງສັດໃຫ້ແກ່ປະໂຣຫິດໃຫ້ເປັນສ່ວນທີ່ຖວາຍທີ່ແທ່ນບູຊາແຫ່ງສັນຕິບູຊາຂອງເຈົ້າ.
[33]ປະໂຣຫິດເປັນ, ເຊື້ອສາຍຂອງອາໂຣນຊຶ່ງເປັນຜູ້ທີ່ຖວາຍເລືອດຂອງສັນຕິບູຊາ
ແລະໄຂມັນເຂົາຈະໄດ້ຮັບຂາຂວາເປັນສ່ວນແບ່ງຂອງເຂົາຈາກເຄື່ອງບູຊາ.[34]ເພາະເຮົາໄດ້ເອົາຊີ້ນຫນ້າເອິກຂອງເຄື່ອງບູຊາຖວາຍ ແລະ
ຕົ້ນຂາຊຶ່ງເປັນຂອງຖວາຍຈາກປະຊາຊົນອິດສະຣາເອນ, ແລະ
ທັງຫມົດນັ້ນມອບໃຫ້ແດ່ອາໂຣນຜູ້ທີ່ເປັນປະໂຣຫິດຂອງບັນດາບຸດຂອງເຂົາຕາມສ່ວນແບ່ງຕາມປົກກະຕິຂອງພວກເຂົາ.
[35]ນີ້ແມ່ນສ່ວນແບ່ງສຳລັບອາໂຣນ ແລະເຊື້ອສາຍຂອງເຂົາຈາກເຄື່ອງບູຊາຕ່າງໆ ທີ່ຖວາຍແດ່ພຣະຢາເວດ້ວຍໄຟ,
ໃນວັນທີ່ໂມເຊຖວາຍພວກເຂົາໃຫ້ປະຕິບັດຮັບໃຊ້ພຣະຢາເວດ້ານວຽກງານແຫ່ງການເປັນປະໂຣຫິດ.
[36]ນີ້ເປັນສ່ວນແບ່ງທີ່ພຣະຢາເວໄດ້ບັນຊາໃຫ້ເອົາຈາກປະຊາຊົນອິດສະຣາເອນ, ແລະ ຍົກໃຫ້ແກ່ພວກເຂົາ ໃນວັນທີ່ເຂົາເຈີມຕັ້ງປະໂຣຫິດ.
ນີ້ຈະເປັນສ່ວນແບ່ງຂອງເຂົາຊົ່ວລຸ້ນອາຍຸ.


generated on Tue Jun 17 19:01:42 2025

37ນີ້ເປັນກົດເກນຂອງເຄື່ອງເຜົາບູຊາ, ເຄື່ອງພືດຜົນບູຊາ ເຄື່ອງບູຊາໄຖ່ຄວາມຜິດ ເຄື່ອງບູຊາຊໍາລະລ້າງບາບ, ເຄື່ອງຖວາຍບູຊາ,
ພິທີບູຊາໃຫ້ບໍລິສຸດ, ແລະເຄື່ອງບູຊາແຫ່ງສັນຕິບູຊາ, 38ຊຶ່ງພຣະຢາເວໄດ້ຊົງບັນຊາແກ່ໂມເຊເທິງພູຊີນາຍ
ໃນວັນທີ່ໂມເຊໄດ້ສັ່ງໃຫ້ປະຊາຊົນອິດສະຣາເອນ ຖວາຍເຄື່ອງບູຊາ ແດ່ພຣະຢາເວໃນຖິ່ນທຸລະກັນດານຊີນາຍ."

 generated on Tue Jun 17 19:01:42 2025

8 [1]ພຣະຢາເວກ່າວແກ່ໂມເຊວ່າ,[2]"ຈົ່ງນຳອາໂຣນ ແລະ ບັນດາລູກຊາຍຂອງເຂົາມາພ້ອມກັບເຂົາ, ນຳເສື້ອຄຸມ ແລະ
ນ້ຳມັນເຈີມສຳລັບເຄື່ອງບູຊາລຶບລ້າງບາບ, ແກະໂຕຜູ້ສອງໂຕ, ແລະຂະຫນົມປັງບໍ່ມີເຊື້ອແປ້ງຫນຶ່ງກະຕ່າ.
[3]ໃຫ້ຊຸມນຸມຊົນມາປະຊຸມກັນຢູ່ທາງຫນ້າທາງເຂົ້າເຕັນນັດພົບ."

[4]ດັ່ງນັ້ນໂມເຊກໍເຮັດຕາມທີ່ພຣະຢາເວໄດ້ຊົງບັນຊາເຂົາ ແລະຊຸມນຸມຊົນກໍມາພ້ອມກັນຫນ້າທາງເຂົ້າເຕັນນັດພົບ.[5]ແລ້ວໂມເຊບອກຊຸມນຸມຊົນວ່າ,
"ນີ້ແມ່ນສິ່ງທີ່ພຣະຢາເວໄດ້ຊົງບັນຊາໃຫ້ເຮັດ."
[6]ໂມເຊໄດ້ນຳເອົາອາໂຣນແລະລູກຊາຍຂອງອາໂຣນມາແລະໄດ້ລ້າງຊຳລະເຂົາດ້ວຍນ້ຳ.[7]ໂມເຊໄດ້ເອົາຊຸດໃສ່ໃຫ້ອາໂຣນ,
ແລະມັດຜ້າຮອບແອວເຂົາໃສ່ເສື້ອໃຫ້ເຂົາ ແລ້ວໃສ່ເອໂຟດໃຫ້ເຂົາ
ແລະໂມເຊໄດ້ຮັດເອໂຟດດ້ວຍຜ້າມັດແອວທຸກຢ່າງຮອບໂຕເຂົາດີແລະມັດເອໂຟດໃຫ້ຕິດກັບອາໂຣນ.
[8]ໂມເຊໄດ້ສວມເຄື່ອງປ້ອງກັນຫນ້າເອິກໃຫ້ແກ່ອາໂຣນ, ແລະ ໄດ້ໃສ່ອຸຣິມ ແລະ ທຸມມິມໃສ່ໃນນັ້ນດ້ວຍ.[9]ໂມເຊໄດ້ມັດຜ້າໃສ່ຫົວອາໂຣນ,
ດ້ານຫນ້າຂອງຜ້າມາລາ, ໂມເຊໄດ້ມັດແຜ່ນທອງຄຳເປັນມົງກຸດ, ທີ່ບໍລິສຸດຕາມທີ່ພຣະຢາເວໄດ້ຊົງບັນຊາເຂົາ.
[10]ໂມເຊໄດ້ເອົານ້ຳມັນເຈີມ, ໄປເຈີມຫໍເຕັນສັກສິດພ້ອມກັບທຸກສິ່ງຢູ່ໃນນັ້ນ ແລະແຍກສິ່ງເຫລົ່ານັ້ນໄວ້ຕ່າງຫາກແດ່ພຣະຢາເວ.
[11]ເຂົາໄດ້ເອົານ້ຳມັນຊິດໃສ່ແທ່ນບູຊາເຈັດຄັ້ງ. ແລະເຈີມແທ່ນບູຊາແລະ ເຄື່ອງໃຊ້ປະຈຳເຄື່ອງບູຊາທັງຫມົດ, ແລະອ່າງລ້າງຊຳລະຖ້ານຮອງ,
ເພື່ອແຍກສິ່ງເຫລົ່ານັ້ນໄວ້ຕ່າງຫາກແດ່ພຣະຢາເວ.
[12]ໂມເຊໄດ້ຖອກນ້ຳມັນເຈີມໃສ່ຫົວຂອງອາໂຣນແນ່ ແລະໄດ້ເຈີມເຂົາໄວ້ເພື່ອແຍກຕ່າງຫາກ.
[13]ໂມເຊໄດ້ນຳລູກຂອງອາໂຣນມາແລ້ວໃສ່ຊຸດໃຫ້ເຂົາ. ໂມເຊໄດ້ເອົາຜ້າມັດແອວພວກເຂົາ ແລະເອົາຜ້າປ່ານມັດຫົວພວກເຂົາ,
ຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້.
[14]ໂມເຊໄດ້ນຳງົວມາເປັນເຄື່ອງບູຊາລົບລ້າງບາບ, ແລະອາໂຣນ
ແລະບັນດາລູກຂອງເຂົາໄດ້ວາງມືຂອງເຂົາເທິງຫົວງົວທີ່ພວກເຂົານຳມາເປັນເຄື່ອງບູຊາລົບລ້າງບາບ.[15]ໂມເຊໄດ້ຂ້າງົວນັ້ນ
ແລະເອົາມືຂອງເຂົາຈຸ່ມເລືອດແລ້ວໄປເຈີມໃສ່ຕີນແທ່ນບູຊາ, ຊຳລະແທ່ນບູຊາໃຫ້ບໍຣິສຸດ ແລະຖອກເລືອດໃສ່ແທ່ນບູຊາ,
ແລະແຍກໄວ້ຕ່າງຫາກສຳລັບພຣະເຈົ້າເພື່ອເຮັດການລົບມົນທິນຂອງແທ່ນບູຊານັ້ນ.
[16]ໂມເຊໄດ້ເອົາໄຂມັນທັງຫມົດທີ່ຫຸ້ມເຄື່ອງໃນ, ທີ່ຫຸ້ມຕັບ ແລະ ຫມາກໄຂ່ຫລັງທັງສອງຂ້າງ ເລະໄຂມັນຂອງຫມາກໄຂ່ຫລັງ,
ແລະໂມເຊໄດ້ເຜົາທັງຫມົດນັ້ນເທິງແທ່ນບູຊາ[17]ແລະງົວໂຕນັ້ນຫນັງຂອງມັນຊີ້ນຂອງມັນ ແລະຂີ້ຂອງມັນ ເຂົາໄດ້ເອົາໄປເຜົານອກຄ້າຍ,
ຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້.
[18]ໂມເຊໄດ້ຖວາຍແກະຜູ້ເປັນເຄື່ອງເຜົາບູຊາ, ແລະອາໂຣນ ແລະບັນດາລູກຊາຍຂອງເຂົາໄດ້ວາງມືຂອງເຂົາເທິງຫົວແກະຜູ້ໂຕນັ້ນ.
[19]ໂມເຊໄດ້ຂ້າແກະ ແລະເອົາເລືອດຂອງແກະນັ້ນຊິດຮອບແທ່ນບູຊາ.
[20]ເຂົາໄດ້ຕັດແກະອອກເປັນຕ່ອນ ແລະໄດ້ເຜົາສ່ວນຫົວເລະຊີ້ນສ່ວນຕ່າງໆແລະໄຂມັນ[21]ເຂົາໄດ້ລ້າງເຄື່ອງໃນ ແລະ ສ່ວນຂາດ້ວຍນ້ຳ,
ແລະເຂົາໄດ້ເຜົາແກະຜູ້ທັງຫມົດນັ້ນເທິງເທ່ນບູຊາ. ນີ້ເປັນເຄື່ອງເຜົາບູຊາ ແລະເກີດເປັນກິ່ນຫອມ.
ເປັນເຄື່ອງບູຊາທີ່ຖວາຍແດ່ພຣະຢາເວດ້ວຍໄຟຕາມທີ່ພຣະຢາເວໄດ້ຊົງບັນຊາໂມເຊໄວ້.
[22]ແລ້ວໂມເຊໄດ້ຖວາຍແກະຜູ້ໂຕຫນຶ່ງເປັນແກະຜູ້ທີ່ເປັນເຄື່ອງສະຖາປະນາ, ແລະອາໂຣນ
ແລະລູກຊາຍຂອງເຂົາໄດ້ວາງມືຂອງເຂົາເທິງຫົວແກະຜູ້ນັ້ນ.[23]ອາໂຣນໄດ້ຂ້າແກະ,
ແລະໂມເຊໄດ້ເອົາເລືອດໄປເຈີມປາຍຫູດ້ານຂວາຂອງອາໂຣນ, ແລະຫົວໂປ້ມືດ້ານຂວາຂອງເຂົາ[24]ໂມເຊໄດ້ນຳລູກຊາຍຂອງອາໂຣນ,
ແລະເຂົາໄດ້ເອົາເລືອດແຕະປາຍຫູຂ້າງຂວາຂອງເຂົາ, ທີ່ນິ້ວມືຂວາຂອງພວກເຂົາ ແລະທີ່ຫົວໂປ້ມືຂອງເຂົາ.
ແລ້ວໂມເຊກໍຊິດເລືອດນັ້ນຮອບທຸກດ້ານຂອງແທ່ນບູຊາ.
[25]ໂມເຊໄດ້ເອົາໄຂມັນ, ແລະຫາງທີ່ມີໄຂມັນ, ແລະໄຂມັນທີ່ຕິດກັບເຄື່ອງໃນ, ທີ່ຫຸ້ມຕັບ, ຫມາກໄຂ່ຫລັງສອງຂ້າງແລະໄຂມັນຂອງມັນ,
ແລະຂາຂວາທາງຫລັງ.[26]ໂມເຊໄດ້ເອົາເຂົ້າຈີ່ບໍ່ມີເຊື້ອແປ້ງກ້ອນຫນຶ່ງຈາກກະຕ່າທີ່ວາງຕໍ່ພະພັກພຣະຢາເວ,
ເຂົາເອົາເຂົ້າຫນົມບໍ່ມີເຊື້ອແປ້ງມາຫນຶ່ງກ້ອນ, ແລະ ເຂົ້າຫນົມປັງປະສົມນ້ຳມັນຫນຶ່ງກ້ອນ ແລະ ເຜົາເຂົ້າຫນົມແຜ່ນຫນຶ່ງແຜ່ນ ແລະ
ວາງທັງຫມົດນັ້ນເທິງໄຂມັນ ແລະ ວາງໃສ່ຂາຂວາເບື້ອງທາງຫລັງ.[27]ໂມເຊໄດ້ເອົາທັງຫມົດນີ້ວາງໃສ່ໃນມືຂອງອາໂຣນ ແລະ
ໃນມືຂອງບັນດາລູກຊາຍຂອງເຂົາ ແລະ ໄດ້ຍື່ນຕໍ່ພຣະພັກພຣະຢາເວເປັນເຄື່ອງບູຊາຍື່ນຖວາຍ.
[28]ໂມເຊໄດ້ເອົາທັງຫມົດນັ້ນອອກຈາກມືຂອງພວກເຂົາ ແລະເຜົາທັງຫມົດນັ້ນເທິງແທ່ນບູຊາໃຫ້ເປັນເຄື່ອງເຜົາບູຊາ.
ທັງຫມົດນີ້ເປັນເຄື່ອງບູຊາແຫ່ງການຖວາຍສະຖາປະນາແລະເກີດເປັນກິ່ນຫອມ. ທີ່ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຢາເວ.
[29]ໂມເຊໄດ້ເອົາຊີ້ນຫນ້າເອິກແລະບິດຊີ້ນໃຫ້ເປັນເຄື່ອງບູຊາຖວາຍແດ່ພຣະຢາເວ.
ນີ້ແມ່ນສ່ວນແບ່ງຂອງໂມເຊຈາກແກະໂຕຜູ້ທີ່ໃຊ້ໃນການແຕ່ງຕັ້ງປະໂຣຫິດ, ຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້.
[30]ໂມເຊໄດ້ເອົານ້ຳມັນເຈີມ ແລະ ເລືອດທີ່ຢູ່ເທິງແທ່ນບູຊາ; ມາຊິດໃສ່ອາໂຣນ, ແລະພວກລູກຊາຍຂອງລາວ, ແລະ
ຊິດໃສ່ເທິງເສື້ອຜ້າຂອງບັນດາລູກຊາຍຂອງເຂົາ ແລະຊິດໃສ່ໂຕຂອງເຂົາດ້ວຍ ດ້ວຍວິທີນີ້ໂມເຊໄດ້ແຍກເອົາອາໂຣນ ແລະ ເສື້ອຜ້າຂອງເຂົາ.
ແລະບັນດາລູກຊາຍຂອງເຂົາ ແລະ ເສື້ອຜ້າຂອງພວກເຂົາໄວ້ຕ່າງຫາກ, ສະເພາະພຣະຢາເວ.
[31]ດັ່ງນັ້ນໂມເຊໄດ້ກ່າວແກ່ອາໂຣນ ແລະລູກຊາຍຂອງເຂົາວ່າ, "ຈົ່ງຕົ້ມຊີ້ນບ່ອນທາງເຂົ້າຂອງເຕັນນັດພົບ, ແລະ ໃຫ້ກິນຊີ້ນ ແລະ
ເຂົ້າຈີ່ຈາກກະຕ່າຂອງເຄື່ອງບູຊາເພື່ອການສະຖາປະນາທີ່ນັ້ນ, ຕາມທີ່ໄດ້ສັ່ງໄວ້ວ່າ, "ອາໂຣນ ແລະ ບັນດາລູກຊາຍຂອງເຂົາຈະກິນ."[32]ຊີ້ນ
ແລະ ເຂົ້າຈີ່ທີ່ເຫລືອໃຫ້ພວກທ່ານເຜົາເສຍ.
[33]ພວກທ່ານຕ້ອງບໍ່ອອກໄປຈາກທາງເຂົ້າເຕັນນັດພົບເປັນເວລາເຈັດມື້ຈົນກວ່າວັນແຫ່ງສະຖາປະນາຈະຄົບກຳນົດ.
ເພາະພຣະຢາເວຈະຊົງສະຖາປະນາພວກທ່ານເປັນເວລາເຈັດວັນ.
[34]ສິ່ງທີ່ໄດ້ກຳນົດໃນວັນນີ້ພຣະຢາເວໄດ້ຊົງບັນຊາໃຫ້ເຮັດເພື່ອເປັນການລົບລ້າງບາບໃຫ້ແກ່ພວກທ່ານ.
[35]ພວກທ່ານຈະຕ້ອງຢູ່ຫນ້າທາງເຂົ້າເຕັນນັດພົບ,


generated on Tue Jun 17 19:01:42 2025

ທັງກາງເວັນແລະກາງຄືນເປັນເວລາເຈັດວັນແລະເພື່ອເປັນການຮັກສາພຣະບັນຍັດຂອງພຣະຢາເວ, ເພື່ອພວກທ່ານຈະບໍ່ຕາຍ
ເພາະນີ້ເປັນຄໍາທີ່ເຮົາໄດ້ສັ່ງໄວ້."
36 ດັ່ງນັ້ນອາໂຣນ ແລະ ບັນດາລູກຊາຍຂອງເຂົາໄດ້ເຮັດຕາມທຸກຢ່າງທີ່ພຣະຢາເວໄດ້ຊົງບັນຊາຜ່ານທາງໂມເຊ.


generated on Tue Jun 17 19:01:42 2025

9 [1]ໃນວັນທີແປດໂມເຊໄດ້ເອີ້ນອາໂຣນ ແລະ ລູກຊາຍຂອງເຂົາ ແລະ ບັນດາພວກຜູ້ໃຫຍ່ຂອງອິດສະຣາເອນ.[2]ໂມເຊໄດ້ບອກແກ່ອາໂຣນວ່າ
"ຈົ່ງເອົາລູກງົວໂຕຫນຶ່ງມາຈາກຝູງສຳລັບເປັນເຄື່ອງບູຊາລົບລ້າງບາບ ແລະ ແກະຜູ້ໂຕຫນຶ່ງທີ່ປາສະຈາກການຕຳຫນິ, ແລະ
ຖວາຍທັງສອງຢ່າງຕໍ່ພຣະພັກພຣະຢາເວ.

[3]ເຈົ້າຕ້ອງບອກແກ່ປະຊາຊົນອິດສະຣາເອນວ່າ, "ຈົ່ງເອົາແກະຜູ້ໂຕຫນຶ່ງສຳລັບເປັນເຄື່ອງບູຊາລົບລ້າງບາບ ແລະ ລູກງົວໂຕຫນຶ່ງ ແລະ
ລູກແກະໂຕຫນຶ່ງ ທັງຄູ່ຕ້ອງມີອາຍຸຫນຶ່ງປີ ແລະ ປາສະຈາການຕຳຫນິ, ສຳລັບເປັນເຄື່ອງເຜົາບູຊາ.[4]ໃຫ້ເອົາງົວໂຕຫນຶ່ງ ແລະ
ແກະຜູ້ໂຕຫນຶ່ງສຳລັບເປັນເຄື່ອງສັນຕິບູຊາມາຖວາຍເປັນເຄື່ອງບູຊາຕໍ່ພຣະພັກພຣະຢາເວ, ແລະ
ເອົາເຄື່ອງພືດຜົນບູຊາທີ່ປະສົມນ້ຳມັນມາດ້ວຍເພາະໃນວັນນີ້ພຣະຢາເວຊົງປາດຖະຫນາແກ່ພວກທ່ານ."[5]ດັ່ງນັ້ນພວກເຂົາໄດ້ເອົາທຸກຢ່າງທີ່ໂມເຊໄດ້ສັ່ງໄວ້ໄປທີ່ເຕັນ
ແລະ ຊຸມນຸມອິດສະຣາເອນທັງຫມົດກໍເຂົ້າມາໃກ້ ແລະ ຢືນຕໍ່ພຣະພັກພຣະຢາເວ.
[6]ໂມເຊໄດ້ກ່າວວ່າ,
"ນີ້ແມ່ນສິ່ງທີ່ພຣະຢາເວໄດ້ຊົງບັນຊາໃຫ້ພວກທ່ານເຮັດເພື່ອພຣະສິຣິຂອງພຣະອົງຈະປະກົດແດ່ທ່ານທັງຫລາຍ."[7]ແລ້ວໂມເຊໄດ້ບອກແກ່ອາໂຣນວ່າ,
"ຈົ່ງເຂົ້າໄປໄກ້ແທ່ນບູຊາຖວາຍເຄື່ອງບູຊາລົບລ້າງບາບ, ແລະເຄື່ອງເຜົາບູຊາຂອງທ່ານ ແລະ ເຮັດການລົບມົນທິນສຳລັບໂຕຂອງທ່ານ ແລະ
ສຳລັບປະຊາຊົນ, ເພື່ອຖວາຍເຄື່ອງບູຊາສຳລັບປະຊາຊົນເພື່ອລົບລ້າງມົນທິນບາບສຳລັບໂຕຂອງພວກເຂົາຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້."
[8]ດັ່ງນັ້ນອາໂຣນຈຶ່ງເຂົ້າໄປໃກ້ແທ່ນບູຊາ ແລະໄດ້ຂ້າລູກງົວເປັນເຄື່ອງບູຊາ, ລົບລ້າງບາບເພື່ອຕົນເອງ.
[9]ບັນດາລູກຂອງອາໂຣນກໍນຳເລືອດມາໃຫ້ເຂົາ, ເຂົາກໍເອົານິ້ວຈຸ່ມເລືອດ ແລະ ໄປເຈີມຂ້າງແທ່ນບູຊາ;
ແລ້ວເຂົາກໍຖອກເລືອດນັ້ນໃສ່ຂ້າງແທ່ນບູຊາ.
[10]ເຂົາໄດ້ເຜົາໄຂມັນ, ຫມາກໄຂ່ຫລັງ, ແລະຜັງພືດທີ່ຫຸ້ມຕັບເທິງແທ່ນບູຊາໃຫ້ເປັນເຄື່ອງບູຊາລົບລ້າງບາບ,
ຕາມທີ່ພຣະຢາເວໄດ້ຊົງບັນຊາໂມເຊໄວ້.[11]ເຂົາໄດ້ເຜົາຊີ້ນ ແລະຫນັງພາຍນອກຄ້າຍພັກ.
[12]ອາໂຣນໄດ້ຂ້າສັດຂອງເຄື່ອງເຜົາບູຊາ, ແລະບັນດາລູກຂອງອາໂຣນໄດ້ເອົາເລືອດມາໃຫ້ເຂົາ
ຊຶ່ງເຂົາໄດ້ເອົາເລືອດໄປຊິດໃສ່ແທ່ນບູຊາທຸກດ້ານ.
[13]ແລ້ວບັນດາລູກຂອງອາໂຣນກໍສົ່ງເຄື່ອງບູຊາແຕ່ລະອັນພ້ອມກັບຫົວໃຫ້ແກ່ອາໂຣນແລະອາໂຣນກໍເຜົາທັງຫມົດນັ້ນເທິງແທ່ນບູຊາ[14]ອາໂຣນໄດ້ລ້າງເຄື່ອງໃນ
ແລະ ຂາສັດ ແລະໄດ້ເຜົາທັງຫມົດນັ້ນເທິງເຄື່ອງເຜົາບູຊາທີ່ຢູ່ເທິງແທ່ນບູຊາ.
[15]ອາໂຣນໄດ້ນຳແບ້ໂຕຫນຶ່ງມາຖວາຍເປັນເຄື່ອງບູຊາຂອງປະຊາຊົນ ແລະ ເອົາແບ້ເປັນເຄື່ອງບູຊາສຳລັບໄຖ່ຄວາມຜິດບາບຂອງພວກເຂົາ, ແລະ
ຂ້າເສຍອາໂຣນໄດ້ຖວາຍແກະນັ້ນສຳລັບຄວາມຜິດບາບ, ດັ່ງທີ່ເຂົາໄດ້ເຮັດກັບແບ້ໂຕທຳອິດ.[16]ອາໂຣນໄດ້ຖວາຍເຄື່ອງບູຊາ
ແລະໄດ້ຖວາຍເຄື່ອງບູຊາຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້.[17]ອາໂຣນໄດ້ຖວາຍເຄື່ອງບູຊາ; ເຂົາໄດ້ນຳມາກຳມືຫນຶ່ງ ແລະ
ເຜົາເສຍເທິງແທ່ນບູຊາໃນຕອນເຊົ້າ.
[18]ອາໂຣນໄດ້ຂ້າງົວໂຕຜູ້, ແລະ ແກະໂຕຜູ້ນັ້ນໃຫ້ເປັນເຄື່ອງສັນຕິບູຊາສຳລັບປະຊາຊົນ. ບັນດາລູກຂອງອາໂຣນໄດ້ນຳເລືອດມາໃຫ້ເຂົາ
ຊຶ່ງເຂົາໄດ້ເອົາເລືອດມາຊິດໃສ່ແທ່ນບູຊາທຸກດ້ານ.[19]ແຕ່ພວກເຂົາໄດ້ຕັດໄຂມັນແກະຜູ້ ແລະແບ້ໂຕຜູ້, ຫາງທີ່ມີໄຂມັນ, ໄຂມັນທີ່ຫຸ້ມເຄື່ອງໃນ,
ຫມາກໄຂ່ຫລັງ ແລະ ຜັງພືດທີ່ຫຸ້ມຕັບ.
[20]ພວກເຂົາໄດ້ເອົາຊີ້ນສ່ວນຕ່າງໆທີ່ຖືກຫັ່ນອອກໄປວາງໄວ້ເທິງຊີ້ນອອກ, ແລ້ວອາໂຣນກໍເຜົາໄຂມັນນັ້ນເທິງແທ່ນບູຊາ.
[21]ອາໂຣນໄດ້ຍົກຊີ້ນອອກແລະຕົ້ນຂາຂວາຂຶ້ນເພື່ອໃຫ້ເປັນເຄື່ອງບູຊາໂບກຖວາຍແດ່ພຣະຢາເວ, ດັ່ງທີ່ໂມເຊໄດ້ກຳຫນົດສັ່ງໄວ້.
[22]ແລ້ວອາໂຣນກໍຍົກມືຂຶ້ນຕໍ່ຫນ້າປະຊາຊົນແລະອວຍພອນພວກເຂົາ; ແລ້ວອາໂຣນກໍລົງມາຈາກການຖວາຍເຄື່ອງບູຊາລົບລ້າງບາບ
ເຄື່ອງເຜົາບູຊາ, ແລະສັນຕິບູຊາ.[23]ໂມເຊກັບອາໂຣນໄດ້ເຂົ້າໄປເຕັນນັດພົບ, ແລ້ວເມື່ອເຂົາທັງສອງໄດ້ອອກມາອີກຄັ້ງ ແລະ
ໄດ້ອວຍພອນປະຊາຊົນ ແລະ ພຣະສິຣິພຣະຢາເວໄດ້ປະກົດແກ່ປະຊາຊົນທັງປວງ.[24]ແລ້ວມີໄຟພຸ່ງອອກມາຈາກພຣະຢາເວ ແລະ
ເຜົາເຄື່ອງບູຊາ ແລະ ໄຂຂອງມັນທີ່ຢູ່ເທິງແທ່ນບູຊາ ເມື່ອປະຊາຊົນທັງປວງໄດ້ເຫັນເຫດການນີ້ ພວກເຂົາກໍເປັ່ງສຽງຂຶ້ນ ແລະ
ກົ້ມຫນ້າລົງກັບພື້ນ.

10 [1]ນາດາບແລະອາບີຮູ, ລູກຊາຍຂອງອາໂຣນ, ຕ່າງໄດ້ເອົາຫມໍ້ຂາງຂອງຕົນມາ, ແລະເອົາຖ່ານໄຟລົງໄປ, ແລ້ວໃສ່ເຄື່ອງຫອມ.
ແລ້ວພວກເຂົາໄດ້ຖວາຍໄຟທີ່ຕ້ອງຫ້າມຕໍ່ພຣະພັກພຣະຢາເວ. ຊຶ່ງພຣະອົງບໍ່ໄດ້ຊົງບັນຊາໃຫ້ພວກເຂົາຖວາຍ.
[2]ດັ່ງນັ້ນຈຶ່ງມີໄຟອອກມາເຜົາຜານພວກເຂົາຕໍ່ພະພັກພຣະຢາເວ, ແລະ ພວກເຂົາໄດ້ຕາຍລົງຕໍ່ພຣະພັກພຣະຢາເວ.

[3]ແລ້ວໂມເຊໄດ້ບອກແກ່ອາໂຣນວ່າ, "ນີ້ແມ່ນສິ່ງທີ່ພຣະຢາເວໄດ້ກ່າວເຖິງເມື່ອພຣະອົງໄດ້ສັ່ງວ່າ,
"ເຮົາຈະສໍາແດງຄວາມບໍຣິສຸດຂອງເຮົາແກ່ບັນດາຜູ້ທີ່ເຂົ້າມາໃກ້ເຮົາ. ເຮົາຈະໄດ້ຮັບການຍົກຍ້ອງຕໍ່ຫນ້າຄົນທັງປວງ." ອາໂຣນກໍເສີຍ
ແລະມິດງຽບ.[4]ໂມເຊໄດ້ເອີ້ນມີຊາເອນ ແລະເອນຊາຟັນ, ຜູ້ເປັນບຸດຊາຍຂອງອຸດຊີເອນ ລຸງຂອງອາໂຣນມາ, ແລະ ບອກພວກເຂົາວ່າ,
"ຈົ່ງມາແບກພີ່ນ້ອງຂອງພວກທ່ານອອກໄປຈາກຄ້າຍ ຕາມທີ່ໂມເຊໄດ້ສັ່ງ."
[5]ດັ່ງນັ້ນພວກປະໂຣຫິດຈຶ່ງເຂົ້າມາໃກ້, ແລະໄດ້ແບກສອງຄົນນັ້ນອອກໄປຈາກຄ້າຍພັກທັງທີ່ຍັງໃສ່ຊຸດປະໂຣຫິດຢູ່, ຕາມທີ່ໂມເຊໄດ້ສັ່ງໄວ້.
[6]ແລ້ວໂມເຊໄດ້ກ່າວແກ່ອາໂຣນແລະເອເລອາຊາ ແລະອິທູມາ, ຜູ້ເປັນລູກຂອງອາໂຣນວ່າ, "ຢ່າປ່ອຍໃຫ້ເສັ້ນຜົມຂອງພວກທ່ານຫ້ອຍລົງ,
ແລະຢ່າຈີກຜ້າຂອງພວກທ່ານ ເພື່ອພວກທ່ານຈະບໍ່ຕາຍ, ແລະເພື່ອພຣະຢາເວຈະບໍ່ໂກດຮ້າຍກັບຊຸມນຸມຊົນທັງປວງ,
ແຕ່ໃຫ້ບັນດາຍາດຂອງພວກທ່ານ ແລະ ເຊື້ອຊາດອິດສະຣາເອນທັງຫມົດໄວ້ທຸກໃຫ້ແກ່ພວກທີ່ພຣະຢາເວໄດ້ຊົງເຜົາຜານໄດ້.
[7]ພວກທ່ານຕ້ອງບໍ່ອອກຈາກທາງເຂົ້າຂອງເຕັນນັດພົບ ບໍ່ສະນັ້ນພວກທ່ານຈະຕ້ອງຕາຍ
ເພາະນໍ້າມັນແຫ່ງການເຈີມຂອງພຣະຢາເວຊົງຢູ່ກັບພວກທ່ານ." ດັ່ງນັ້ນພວກເຂົາຈຶ່ງເຮັດຕາມຄໍາສັ່ງຂອງໂມເຊ.
[8]ພຣະຢາເວໄດ້ກ່າວແກ່ອາໂຣນວ່າ, "[9]ຢ່າກິນເຫລົ້າອະງຸ່ນຫລືເຄື່ອງດື່ມມຶນເມົາ ທັງໂຕເຈົ້າ
ຫລືບັນດາລູກຊາຍຂອງເຈົ້າທີ່ຍັງເຫລືອຢູ່ກັບເຈົ້າເມື່ອພວກເຈົ້າເຂົ້າໄປທີ່ເຕັນນັດພົບ, ເພື່ອພວກເຈົ້າຈະບໍ່ຕາຍ.
ນີ້ເປັນກົດເກນຕະຫລອດຊົ່ວອາຍຸຂອງພວກເຈົ້າ.[10]ເພື່ອແຍກເບິ່ງລະຫວ່າງຄວາມບໍຣິສຸດ ແລະ ຄວາມທໍາມະດາ, ລະຫວ່າງມົນທິນ ແລະ
ບໍ່ມີມົນທິນ,[11]ເພື່ອທີ່ພວກເຂົາຈະໄດ້ສອນປະຊາຊົນອິດສະຣາເອນເຖິງກົດເກນທີ່ພຣະຢາເວໄດ້ຊົງບັນຊາຜ່ານທາງໂມເຊ."
[12]ໂມເຊກ່າວແກ່ອາໂຣນ ແລະ ເອເລອາຊາ ແລະ ອິທາມາ, ຊຶ່ງເປັນລູກຂອງອາໂຣນວ່າ,
"ຈົ່ງເອົາເຄື່ອງບູຊາທີ່ເຫລືອຈາກການຖວາຍດ້ວຍໄຟແດ່ພຣະຢາເວ, ແລ້ວກິນໂດຍປາສະຈາກເຊື້ອແປ້ງຂ້າງແທ່ນບູຊາ,
ເພາະນີ້ເປັນສິ່ງທີ່ບໍຣິສຸດທີ່ສຸດ.[13]ທ່ານຕ້ອງກິນອາຫານໃນສະຖານທີ່ບໍຣິສຸດ, ເພາະນີ້ເປັນສ່ວນແບ່ງສໍາລັບທ່ານ
ແລະບັນດາລູກຊາຍຂອງທ່ານຈາກເຄື່ອງຖວາຍບູຊາດ້ວຍໄຟແດ່ພຣະຢາເວ, ເພາະຂ້ານ້ອຍໄດ້ຮັບການບັນຊາມາບອກແກ່ທ່ານເຊັ່ນນີ້.
[14]ຊີ້ນຫນ້າເອິກທີ່ຍໍຖວາຍ ແລະ ຊີ້ນຕົ້ນຂາທີ່ຖວາຍແດ່ພຣະຢາເວນັ້ນ, ທ່ານຕ້ອງກິນໃນສະຖານທີ່ສະອາດຊຶ່ງເປັນທີ່ພຣະເຈົ້າຊົງຍອມຮັບ.
ທັງໂຕທ່ານ ແລະ ລູກຊາຍຍິງຂອງທ່ານຄວນກິນສ່ວນເຫລົ່ານັ້ນ, ເພາະໄດ້ມອບໃຫ້ເປັນສ່ວນແບ່ງຂອງທ່ານ ແລະ
ບັນດາລູກຊາຍຂອງທ່ານທີ່ມາຈາກເຄື່ອງຖວາຍບູຊາແຫ່ງສັນຕິບູຊາຂອງປະຊາຊົນອິດສະຣາເອນ.
[15]ໃຫ້ພວກເຂົາເອົາຊີ້ນຕົ້ນຂາທີ່ໄດ້ນໍາມາຖວາຍ ແລະ ຊີ້ນເອິກທີ່ໄດ້ຖວາຍມາພ້ອມກັບໄຂມັນທີ່ຕ້ອງຖວາຍດ້ວຍໄຟ,
ເພື່ອເອົາມາຍໍຖວາຍຕໍ່ພຣະພັກພຣະຢາເວທັງຫມົດ. ນີ້ຈະເປັນຂອງທ່ານ ແລະ ບັນດາລູກຊາຍຂອງທ່ານໃຫ້ເປັນສ່ວນແບ່ງຕະຫລອດໄປ,
ຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້."
[16]ແລ້ວໂມເຊໄດ້ຖາມເຖິງແບ້ໂຕທີ່ໃຊ້ຖວາຍເປັນເຄື່ອງບູຊາລົບລ້າງບາບ, ແລະພົບວ່າແບ້ນັ້ນໄດ້ຖືກເຜົາແລ້ວ. ດັ່ງນັ້ນໂມເຊຈຶ່ງຮ້າຍເອເລອາຊາ
ແລະ ອິທາມາ, ຊຶ່ງເປັນລູກທີ່ເຫລືອຢູ່ຂອງອາໂຣນ; ໂມເຊຈຶ່ງຖາມວ່າ,
[17]"ເປັນຫຍັງພວກທ່ານບໍ່ກິນເຄື່ອງບູຊາລົບລ້າງບາບນັ້ນໃນສະຖານທີ່ບໍຣິສຸດເພາະນີ້ເປັນສິ່ງທີ່ບໍຣິສຸດທີ່ສຸດ, ແລະ
ພຣະຢາເວຊົງມອບໃຫ້ພວກທ່ານ, ເພື່ອຍົກຄວາມຄວາມຜິດບາບຂອງມະນຸດໄປເສຍ ແລະ ເພື່ອລົບລ້າງບາບເຂົາຕໍ່ພຣະພັກພຣະອົງ?[18]ເບິ່ງແມ້,
ເລືອດຂອງແບ້ນັ້ນກໍບໍ່ໄດ້ເຂົ້າໄປໃນສະຖານທີ່ບໍຣິສຸດເພາະສະນັ້ນທ່ານຄວນກິນອາຫານໃນບໍລິເວນທີ່ບໍຣິສຸດຕາມທີ່ຂ້ານ້ອຍໄດ້ສັ່ງໄວ້."
[19]ແລ້ວອາໂຣນໄດ້ຕອບໂມເຊວ່າ, "ເບິ່ງແມ້,
ມື້ນີ້ພວກເຂົາໄດ້ຖວາຍເຄື່ອງບູຊາເພື່ອລົບລ້າງບາບຂອງພວກເຂົາແລະເຜົາເຄື່ອງບູຊາຕໍ່ພຣະພັກພຣະຢາເວ,
ແລະສິ່ງທີ່ເກີດຂຶ້ນໃນພວກເຈົ້າໃນມື້ນີ້ ຖ້າພວກເຈົ້າໄດ້ກິນເຄື່ອງບູຊາລົບລ້າງບາບໃນວັນນີ້,
ແລ້ວນັ້ນຈະເປັນທີ່ພໍພຣະໄທໃນສາຍພຣະເນດພຣະຢາເວໄດ້ບໍ?"[20]ເມື່ອໂມເຊໄດ້ຍິນດັ່ງນັ້ນ, ເຂົາກໍພໍໃຈ.

 generated on Tue Jun 17 19:01:42 2025

11 [1]ພຣະຢາເວໄດ້ຊົງສັ່ງແລະກ່າວແກ່ອາໂຣນວ່າ,[2]"ຈົ່ງກ່າວກັບຄົນອິດສະຣາເອນວ່າ,' ສິ່ງທີ່ມີຊີວິດຕ່າງໆ ທີ່ພວກເຈົ້າສາມາດ
ກິນໄດ້ໃນທ່າມກາງບັນດາສັດທັງປວງທີ່ຢູ່ເທິງແຜ່ນດິນ.

[3]ພວກເຈົ້າສາມາດກິນສັດໃດໆທີ່ແຍກກີບ ແລະທີ່ຄ້ຽວເອື້ອງທຸກໆຊະນິດໄດ້ດ້ວຍ.[4]ຢ່າງໃດກໍຕາມ
ສັດບາງຊະນິດທີ່ຄ້ຽວເອື້ອງໄດ້ຫລືແຍກກີບພຽງຢ່າງດຽວພວກເຈົ້າຕ້ອງບໍ່ກິນພວກມັນ ເຊັ່ນອູດ, ເພາະມັນຄ້ຽວເອື້ອງໄດ້ແຕ່ບໍ່ແຍກກີບ.
ດັ່ງນັ້ນອູດຈຶ່ງເປັນມົນທິນສໍາລັບພວກເຈົ້າ.
[5]ເຊັ່ນດຽວກັນກັບໂຕຕຸ່ນ, ເພາະມັນຄ້ຽວເອື້ອງແຕ່ບໍ່ແຍກກີບ, ຈຶ່ງເປັນມົນທິນສໍາລັບພວກເຈົ້າ.[6]ກະຕ່າຍ, ເພາະມັນຄ້ຽວເອື້ອງແຕ່ບໍ່ແຍກກີບ,
ຈຶ່ງເປັນມົນທິນສໍາລັບພວກເຈົ້າ.[7]ຫມູ, ແມ້ວ່າມັນແຍກກີບແຕ່ບໍ່ຄ້ຽວເອື້ອງ ຈຶ່ງເປັນມົນທິນສໍາລັບພວກເຈົ້າ.
[8]ພວກເຈົ້າຕ້ອງບໍ່ກິນເນື້ອໃດໆຂອງພວກມັນ ຫລືແຕະຕ້ອງຊາກຂອງພວກມັນ. ພວກມັນເປັນມົນທິນສໍາລັບພວກເຈົ້າ.
[9]ບັນດາສັດຕ່າງໆ ທີ່ຢູ່ໃນນໍ້າ ພວກເຈົ້າກິນໄດ້ທັງຫມົດເຊັ່ນຈໍາພວກທີ່ມີຄີ ແລະ ມີເກັດ ບໍ່ວ່າຈະຢູ່ໃນມະຫາສະຫມຸດ ຫລື ໃນແມ່ນໍ້າກໍຕາມ.
[10]ແຕ່ສິ່ງທີ່ມີຊີວິດທັງຫມົດທີ່ບໍ່ມີຄີ ແລະ ບໍ່ມີເກັດໃນມະຫາສະຫມຸດ ຫລື ໃນແມ່ນໍ້າ, ລວມເຖິງທຸກໆສິ່ງທີ່ເຄື່ອນໄຫວໃນນໍ້າ, ແລະ
ສິ່ງທີ່ມີຊີວິດທັງຫມົດຢູ່ໃນນໍ້າ - ພວກມັນຕ້ອງເປັນສິ່ງທີ່ຫນ້າກຽດສໍາລັບພວກເຈົ້າ.
[11]ໃນເມື່ອພວກມັນຕ້ອງເປັນທີ່ຫນ້າລັງກຽດ, ພວກເຈົ້າຕ້ອງບໍ່ກິນເນື້ອຂອງມັນ; ແລະຊາກຂອງມັນເປັນສິ່ງທີ່ຫນ້າລັງກຽດດ້ວຍ.
[12]ແມ່ນຫຍັງກໍຕາມທີ່ບໍ່ມີຄີຫລືບໍ່ມີເກັດໃນນ້ຳເປັນສິ່ງທີ່ຫນ້າລັງກຽດສໍາລັບພວກເຈົ້າ.
[13]ບັນດານົກຕ່າງໆ ທີ່ຫນ້າກຽດສໍາລັບພວກເຈົ້າທີ່ພວກເຈົ້າຕ້ອງບໍ່ກິນມີດັ່ງນີ້ຄື: ນົກອິນຊີ, ນົກແຮ້ງ,[14]ນົກຢ່ຽວຫາງຍາວ, ນົກຢ່ຽວດໍາທຸກຊະນິດ,
[15]ນົກກາທຸກຊະນິດ,[16]ນົກເຄົ້າໃຫຍ່, ນົກເຄົ້ານ້ອຍ, ນົກນາງນວນ, ແລະ ນົກແຫລວທຸກຊະນິດ.
[17]ພວກເຈົ້າຕ້ອງລັງກຽດນົກເຄົ້ານ້ອຍ, ນົກເຄົ້າແມວໃຫຍ່, ນົກອ້າຍການໍ້າ,[18]ແລະນົກອໍຫລໍ, ກະທຸງ, ນົກຢ່ຽວກິນປາ[19]ນົກກະສາດໍາ,
ນົກກະສາທຸກຊະນິດ, ນົກຫົວຂວັນ, ແລະ ເຈຍດ້ວຍ.
[20]ແມງທີ່ມີປີກຊຶ່ງຄານສີ່ຂາທັງຫມົດເປັນທີ່ຫນ້າລັງກຽດສໍາລັບພວກເຈົ້າ.[21]ພວກເຈົ້າຈະກິນແມງໃດໆ
ທີ່ບິນໄດ້ຊຶ່ງຄານສີ່ຂາຖ້າພວກມັນມີຂາພັບໃຊ້ໂດດໄປນໍາດິນໄດ້.[22]ພວກເຈົ້າສາມາດກິນຕັກແຕນ, ຈິ້ງຫລີດ, ຈັກຈັ່ນ, ຫລືຕັກກະແຕນທຸກຊະນິດ.
[23]ແຕ່ແມງໄມ້ບິນໄດ້ ຊຶ່ງຄານສີ່ຂາອື່ນໆ ເປັນສິ່ງທີ່ຫນ້າກຽດສໍາລັບພວກເຈົ້າ.
[24]ພວກເຈົ້າຈະກາຍເປັນມົນທິນໄປຈົນເຖິງຕອນແລງເພາະສັດເຫລົ່ານີ້ ຖ້າເຈົ້າໄປແຕະຕ້ອງຊາກຫນຶ່ງຂອງມັນ.
[25]ໃຜກໍຕາມທີ່ຈັບຊາກຂອງມັນຈະຕ້ອງຊັກເສື້ອຜ້າຂອງເຂົາ ແລະ ຍັງເປັນມົນທິນໄປຈົນຮອດຕອນແລງ.
[26]ສັດທີ່ມີກີບທຸກໂຕແຕ່ບໍ່ໄດ້ແຍກຈາກກັນຕະຫລອດທັງກີບ ຫລື ບໍ່ຄ້ຽວເອື້ອງທຸກໂຕເປັນມົນທິນສໍາລັບພວກເຈົ້າ.
ທຸກຄົນທີ່ແຕະຕ້ອງພວກມັນຈະເປັນມົນທິນ.[27]ສັດຫຍັງກໍຕາມທີ່ຍ່າງດ້ວຍອຸ້ງຕີນໃນບັນດາເຫລົ່າສັດຍ່າງສີ່ຂາ,
ພວກມັນເປັນມົນທິນສໍາລັບພວກເຈົ້າ, ໃຜກໍຕາມທີ່ແຕະຕ້ອງຊາກນັ້ນຈະເປັນມົນທິນໄປຈົນຮອດຕອນແລງ.
[28]ໃຜແຕະຊາກສັດນັ້ນຕ້ອງຊັກເສື້ອຜ້າຂອງເຂົາ ແລະ ເປັນມົນທິນໄປຈົນຮອດຕອນແລງ. ສັດເຫລົ່ານີ້ເປັນມົນທິນສໍາລັບພວກເຈົ້າ.
[29]ໃນບັນດາເຫລົ່າສັດຕ່າງໆ ທີ່ເລືອຄານສັດເຫລົ່ານີ້ຈະເປັນມົນທິນສໍາລັບພວກເຈົ້າ: ເຊັ່ນ ເຫງັນ, ຫນູ, ຫນູຊິງ, ໂຕເຮັຍທຸກຊະນິດ.[30]ກັບແກ້,
ກະປອມ, ແຫຍ້, ຈິ້ງຫລີດ, ແລະ ຈີໂກະ.
[31]ໃນບັນດາສັດທັງຫມົດທີ່ເລືອຄານ, ເຫລົ່ານີ້ເປັນສັດທີ່ເປັນມົນທິນສໍາລັບພວກເຈົ້າ. ໃຜກໍຕາມທີ່ແຕະຕ້ອງພວກມັນ
ເມື່ອມັນຕາຍຈະເປັນມົນທິນໄປຈົນເຖິງຕອນແລງ.[32]ຖ້າສັດເຫລົ່ານັ້ນຕາຍ ແລະ ຕົກຖືກສິ່ງໃດກໍຕາມ, ສິ່ງນັ້ນຈະເປັນມົນທິນບໍ່ວ່າຈະຖືກໄມ້, ຜ້າ,
ຫນັງສັດ, ຫລື ຜ້າກະສອບບໍ່ວ່າຈະເປັນຫຍັງ ແລະ ບໍ່ວ່າຈະໃຊ້ເພື່ອສິ່ງໃດກໍຕາມ ສິ່ງນັ້ນຕ້ອງນໍາໄປຈຸ່ມນໍ້າ;
ແລ້ວຈະເປັນມົນທິນໄປຈົນເຖິງຕອນແລງ. ແລ້ວຈຶ່ງຈະສະອາດ.[33]ຫມໍ້ດິນທຸກໃບທີ່ສັດເປັນມົນທິນຕົກເຂົ້າໄປໃນຫມໍ້ ຫລື ຕົກໃນເທິງຫມໍ້,
ແມ່ນຫຍັງກໍຕາມທີ່ຢູ່ໃນຫມໍ້ກໍຈະກາຍເປັນມົນທິນ, ແລະ ພວກເຈົ້າຕ້ອງທໍາລາຍຫມໍ້ໃບນັ້ນຖິ້ມ.
[34]ອາຫານທຸກຢ່າງທີ່ສະອາດ ແລະ ອະນຸຍາດໃຫ້ກິນໄດ້, ແຕ່ມີນໍ້າທີ່ເປັນມົນທິນຢົດໃສ່, ອາຫານນັ້ນກໍເປັນມົນທິນ,
ທຸກສິ່ງທີ່ດື່ມນໍ້າໃນຫມໍ້ນັ້ນຈະກາຍເປັນມົນທິນ.[35]ທຸກສິ່ງທີ່ຖືກສ່ວນໃດກໍຕາມຂອງຊາກສັດທີ່ເປັນມົນທິນຕົກໃສ່ຈະເປັນມົນທິນ,
ບໍ່ວ່າຈະເປັນເຕົາອົບ ຫລືຫມໍ້ເຮັດອາຫານ ຈະຕ້ອງທຸບໃຫ້ເປັນຊິ້ນສ່ວນ. ຫມໍ້ນັ້ນເປັນມົນທິນ ແລະ ຕ້ອງເປັນມົນທິນສໍາຫລັບພວກເຈົ້າ.
[36]ນໍ້າພຸ ຫລື ອ່າງນໍ້າດື່ມຍັງເປັນສິ່ງທີ່ສະອາດຖ້າສັດແບບນັ້ນຕົກລົງໄປ. ແຕ່ຖ້າໃຜຖືກຊາກສັດທີ່ເປັນມົນທິນໃນນໍ້າ, ເຂົາຈະກາຍເປັນມົນທິນ.
[37]ຖ້າສ່ວນໃດໆຂອງຊາກສັດທີ່ເປັນມົນທິນຕົກລົງເມັດສໍາຫລັບເມັດພືດປູກຊະນິດໃດກໍຕາມເມັດເຫລົ່ານັ້ນກໍຍັງສະອາດຢູ່.
[38]ແຕ່ຖ້ານໍ້າທີ່ຕົກໃສ່ເມັດພືດ ແລະ ຖ້າມີສ່ວນໃດໆຂອງຊາກສັດທີ່ເປັນມົນທິນຕົກໃສ່ນໍ້າ ນໍ້ານັ້ນກໍຈະເປັນມົນທິນຕໍ່ພວກເຈົ້າ.
[39]ຖ້າສັດໂຕໃດທີ່ເຈົ້າສາມາດກິນ ໄດ້ຕາຍລົງໄປ, ແລ້ວຜູ້ທີ່ຖືກຕ້ອງຊາກສັດກໍຈະກາຍເປັນມົນທິນໄປຈົນເຖິງຕອນແລງ.
[40]ໃຜກໍຕາມທີ່ກິນຊາກສັດສ່ວນໃດກໍຕາມຂອງສັດນັ້ນຈະຕ້ອງຊັກເສື້ອຜ້າຂອງເຂົາ ແລະ ຈະເປັນມົນທິນໄປຈົນຮອດຕອນແລງ.
ໃຜກໍຕາມທີ່ຈັບຊາກສັດນັ້ນຈະຕ້ອງຊັກເສື້ອຜ້າຂອງເຂົາ ແລະ ຈະເປັນມົນທິນໄປຈົນຮອດຕອນແລງ.
[41]ສັດທຸກຊະນິດທີ່ຄານເທິງດິນດ້ວຍທ້ອງເປັນສິ່ງຫນ້າລັງກຽດ; ຢ່າກິນສັດເຫລົ່ານັ້ນ.[42]ແມ່ນຫຍັງກໍຕາມທີ່ເລືອຄານດ້ວຍທ້ອງ ແລະ
ແມ່ນຫຍັງກໍຕາມທີ່ແລ່ນສີ່ຂາ ຫລື ແມ່ນຫຍັງກໍຕາມທີ່ມີຂາຫລາຍຂາ ສັດທີ່ເລືອຄານເທິງດິນທັງຫມົດ, ພວກເຈົ້າຕ້ອງບໍ່ກິນສັດເຫລົ່ານີ້,
ເພາະມັນເປັນສິ່ງຫນ້າກຽດ.
[43]ພວກເຈົ້າຕ້ອງບໍ່ເຮັດໃຫ້ໂຕເຈົ້າເປັນມົນທິນດ້ວຍສິ່ງທີ່ມີຊີວິດໃດໆ ທີ່ຄານດ້ວຍທ້ອງ; ພວກເຈົ້າຕ້ອງເປັນເປັນມົນທິນເພາະພວກມັນ,
ເພາະພວກເຈົ້າຈະຖືກເຮັດໃຫ້ບໍ່ ບໍຣິສຸດ ເພາະພວກມັນ.[44]ເພາະເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ ພວກເຈົ້າຕ້ອງຮັກສາໂຕເຈົ້າໃຫ້
ບໍຣິສຸດ, ເພາະສະນັ້ນ, ຈົ່ງບໍຣິສຸດ ເພາະເຮົາບໍຣິສຸດ.
ພວກເຈົ້າຕ້ອງບໍ່ເຮັດໃຫ້ພວກເຈົ້າເປັນມົນທິນດ້ວຍສັດຊະນິດໃດກໍຕາມທີ່ເຄື່ອນໄຫວໄປມາເທິງຫນ້າດິນ.
[45]ຜູ້ທີ່ນໍາພວກເຈົ້າອອກມາຈາກດິນແດນຂອງເອຢິບ, ເພື່ອເປັນພຣະເຈົ້າຂອງພວກເຈົ້າ ເຫດສະນັ້ນພວກເຈົ້າຕ້ອງບໍຣິສຸດ.
[46]ນີ້ຄືກົດເກນແຫ່ງສັດຕ່າງໆ, ນົກຕ່າງໆ, ສິ່ງທີ່ມີຊີວິດທຸກຊະນິດທີ່ເຄື່ອນໄປໃນນໍ້າ ແລະສິ່ງທີ່ມີຊີວິດທຸກຢ່າງທີ່ເລືອຄານໄປມາເທິງດິນ.
[47]ເພື່ອຈະແບ່ງແຍກສິ່ງທີ່ມີຊີວິດທີ່ສາມາດກິນໄດ້ ແລະສິ່ງທີ່ມີຊີວິດທີ່ກິນບໍ່ໄດ້."


generated on Tue Jun 17 19:01:42 2025

12 [1]ພຣະຢາເວໄດ້ກ່າວແກ່ໂມເຊວ່າ,[2]"ຈົ່ງບອກແກ່ຄົນອິດສະຣາເອນວ່າ, "ຖ້າຜູ້ຍິງຄົນໃດມີລູກ ແລະ ອອກລູກຊາຍ
ນາງກໍຈະເປັນມົນທິນເປັນເວລາເຈັດວັນ, ເຊັ່ນດຽວກັນກັບເມື່ອນາງເປັນມົນທິນໃນຊ່ວງມີປະຈຳເດືອນຂອງນາງ.[3]ໃນວັນທີແປດ
ເດັກນ້ອຍນັ້ນຈະຕ້ອງເຮັດພິທີຕັດໜັງປາຍອະໄວຍະວະເພດຂອງເດັກນ້ອຍຊາຍນັ້ນ.

[4]ແລ້ວເຮັດການຊຳລະມານດາໃຫ້ບໍຣິສຸດຈາກການຕົກເລືອດຂອງນາງຕໍ່ໄປອີກສາມສິບສາມວັນ. ຫ້າມນາງຈັບຕ້ອງສິ່ງບໍຣິສຸດໃດໆ
ຫລືເຂົ້າມາສະຖານທີ່ສັກສິດຈົນກວ່າຈະຄົບກຳນົດວັນແຫ່ງການຊຳລະໃຫ້ບໍຣິສຸດຂອງນາງ.[5]ແຕ່ຖ້າເກີດລູກຜູ້ຍິງ
ນາງຈະເປັນມົນທິນເປັນເວລາສອງອາທິດ, ເຊັ່ນດຽວກັບກັນການເປັນປະຈຳເດືອນຂອງນາງ.
ແລ້ວກໍຈະຊຳລະມານດາໃຫ້ບໍຣິສຸດຕໍ່ໄປອີກຫົກສິບຫົກວັນ.
[6]ເມື່ອຄົບກຳນົດວັນແຫ່ງການຊຳລະໂຕໃຫ້ບໍຣິສຸດຂອງນາງແລ້ວ ບໍ່ວ່າສຳຫລັບລູກຊາຍຫລືລູກຜູ້ຍິງ,
ນາງຈະຕ້ອງນຳລູກແກະອາຍຸຫນຶ່ງປີມາເປັນເຄື່ອງເຜົາບູຊາ, ແລະນົກພິລາບຫລືນົກເຂົາມາເປັນເຄື່ອງບູຊາລົບລ້າງບາບ,
ໃຫ້ນຳມາມອບໃຫ້ແກ່ປະໂຣຫິດທີ່ທາງເຂົ້າເຕັນນັດພົບ.
[7]ແລ້ວປະໂຣຫິດຈະຖວາຍເຄື່ອງບູຊາຕໍ່ພຣະພັກພຣະຢາເວ ແລະເຮັດການລົບລ້າງມົນທິນສຳຫລັບນາງ,
ແລະນາງໄດ້ຮັບການຊຳລະຈາກການຕົກເລືອດຂອງນາງ. ນີ້ແມ່ນກົດເກນສຳຫລັບຜູ້ຍິງຄົນໃດທີ່ເກີດລູກຊາຍ ຫລືຍິງກໍຕາມ.
[8]ຖ້ານາງບໍ່ສາມາດຫາລູກແກະມາໄດ້ ນາງຕ້ອງນຳນົກເຂົາສອງໂຕຫລືນົກພິລາບ, ໃຫ້ໂຕຫນຶ່ງເປັນເຄື່ອງເຜົາບູຊາ
ແລະອີກໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບ ປະໂລຫິດຈະເຮັດການລົບລ້າງບາບໃຫ້ແກ່ນາງ; ແລ້ວນາງກໍຈະສະອາດ."


generated on Tue Jun 17 19:01:42 2025

13 1ພຣະຢາເວໄດ້ກ່າວແກ່ໂມເຊ ແລະອາໂຣນ ວ່າ, 2"ເມື່ອຄົນໃດມີອາການບວມ ຫລື ຜື່ນ ຫລືຮອຍດ່າງຕາມຜິວຂອງເຂົາ ແລະຕິດເຊື້ອ
ແລະມີໂຣກຜິວຫນັງໃນຮ່າງກາຍຂອງເຂົາ, ກໍພາເຂົາມາຫາອາໂຣນຜູ້ເປັນມະຫາປະໂຣຫິດ,
ຫລືບຸກຄົນຫນຶ່ງຄົນໃດຂອງລູກຂອງເຂົາທີ່ເປັນປະໂຣຫິດ.

3ແລ້ວປະໂຣຫິດຈະກວດໂຣກທີ່ຜິວຫນັງຂອງຮ່າງກາຍເຂົາ. ຖ້າຂົນທີ່ເປັນໂຣກກາຍເປັນສີຂາວ, ແລະຖ້າໂຣກນັ້ນເປັນເລິກກວ່າຜິວຫນັງ
ສະແດງວ່ານັ້ນເປັນໂຣກທີ່ຕິດເຊື້ອ, ຫລັງຈາກປະໂຣຫິດກວດເຂົາແລ້ວ ຕ້ອງປະກາດວ່າເຂົາເປັນມົນທິນ.
4ຖ້າຮອຍດ່າງທີ່ຜິວຂອງເຂົາເປັນສີຂາວ, ແລະປະກົດວ່າເປັນບໍ່ເລິກໄປກວ່າຜິວຫນັງ, ແລະຖ້າຂົນບ່ອນບໍລິເວນທີ່ເປັນໂຣກບໍ່ກາຍເປັນສີຂາວ,
ປະໂຣຫິດຕ້ອງກັກຄົນທີ່ເປັນໂຣກໄວເຈັດວັນ.
5ໃນວັນທີເຈັດ, ປະໂຣຫິດຕ້ອງກວດເບິ່ງເຂົາເພື່ອເບິ່ງວ່າໃນຄວາມເຫັນຂອງປະໂຣຫິດນັ້ນຖ້າເຫັນວ່າໂຣກນັ້ນບໍ່ດີລົງ,
ແລະຖ້າບໍ່ລາມໄປຕາມຜິວຫນັງ. ຖ້າບໍ່ມີ, ກໍໃຫ້ປະໂຣຫິດກັກເຂົາໄວ້ເຈັດວັນອີກ. 6ແລ້ວປະໂຣຫິດຈະກວດອີກເທື່ອຫນຶ່ງໃນວັນທີເຈັດ
ເພື່ອເບິ່ງວ່າໂຣກນັ້ນດີຂຶ້ນ ແລະບໍ່ລາມເພີ່ມອີກຕາມຜິວຫນັງ. ຖ້າບໍ່ມີກໍໃຫ້ປະໂຣຫິດປະກາດວ່າເຂົາສະອາດ ເປັນພຽງຜື່ນຄັນ.
ເຂົາຕ້ອງຊັກເສື້ອຜ້າຂອງເຂົາແລ້ວເຂົາກໍສະອາດ.
7ແຕ່ຖ້າຜື່ນນັ້ນລາມໄປຕາມຜິວຫນັງຈາກທີ່ເຂົາໄດ້ໄປ ສະແດງໂຕຕໍ່ປະໂລຫິດເພື່ອຊໍາຣະຕົນ, ເຂົາຕ້ອງມາສະແດງໂຕຕໍ່ປະໂຣຫິດອີກຄັ້ງ.
8ປະໂຣຫິດຈະກວດເຂົາເພື່ອເບິ່ງວ່າຜື່ນໄດ້ລາມໄປຕາມຜິວຫນັງເພີ່ມ ຫລືຖ້າໄດ້ລາມໄປ. ປະໂຣຫິດປະກາດວ່າເຂົາເປັນມົນທິນ
ນັ້ນເປັນໂຣກທີ່ຕິດເຊື້ອ.
9ເມື່ອມີໂຣກຜິວຫນັງທີ່ຕິດເຊື້ອມີຢູ່ໃນບາງຄົນ, ຕ້ອງພາເຂົາໄປຫາປະໂຣຫິດ. 10ປະໂຣຫິດຈະກວດເຂົາເພື່ອເບິ່ງວ່າມີຜິວຫນັງບວມສີຂາວ ຫລືບໍ່,
ຖ້າຂົນໄດ້ກາຍເປັນສີຂາວ ຫລືຖ້າມີແຜສົດທີ່ບວມ. 11ຖ້າມີ, ສະແດງວ່ານັ້ນແມ່ນໂຣກຜິວຫນັງຊໍ້າເຮື້ອ
ແລະປະໂຣຫິດຕ້ອງປະກາດວ່າເຂົາເປັນມົນທິນ. ປະໂຣຫິດຈະກັກໂຕເຂົາໄວ້ ເພາະວ່າເຂົາເປັນມົນທິນແລ້ວ.
12ຖ້າໂຣກນັ້ນກະຈາຍໄປທົ່ວຜິວຫນັງ ແລະ ຄວບຄຸມຜິວຫນັງທັງໂຕຂອງຄົນນັ້ນຈາກຫົວລົງຮອດຕີນ, ຕາມທີ່ໄດ້ປະກົດແກ່ປະໂຣຫິດ,
13ແລ້ວປະໂຣຫິດຕ້ອງກວດເຂົາເພື່ອເບິ່ງວ່າໂຣກນັ້ນໄດ້ຄວບຄຸມໄປທົ່ວທັງຮ່າງກາຍຂອງເຂົາຫລືບໍ່. ຖ້າເປັນ,
ປະໂຣຫິດຕ້ອງປະກາດວ່າຄົນທີ່ເປັນໂຣກນັ້ນສະອາດ. ຖ້າໂຕຂອງເຂົາຂາວທັງຫມົດ ເຂົາກໍສະອາດ 14ແຕ່ຖ້າມີແຜສົດປະກົດນໍາໂຕເຂົາ
ເຂົາຈະເປັນມົນທິນ.
15ປະໂຣຫິດຕ້ອງເບິ່ງແຜສົດນັ້ນ ແລະປະກາດວ່າ ເຂົາເປັນມົນທິນເພາະແຜສົດນັ້ນເປັນມົນທິນ. ມັນເປັນໂຣກທີ່ຕິດເຊື້ອ.
16ແຕ່ຖ້າແຜສົດນັ້ນເປັນແຜຂາວອີກຄັ້ງ, ຄົນນັ້ນຕ້ອງເປັນປະໂຣຫິດ.
17ແລ້ວປະໂຣຫິດຈະກວດເຂົາເພື່ອເບິ່ງວ່າເນື້ອຫນັງຂອງເຂົາໄດ້ກາຍເປັນສີຂາວຫລືບໍ່. ຖ້າເປັນ ປະໂຣຫິດຈະປະກາດວ່າຄົນນັ້ນສະອາດ.
18ເມື່ອຄົນໃດເປັນຝີຕາມຜິວຫນັງ ແລະໄດ້ຫາຍແລ້ວ, 19ແລະຢູ່ບໍລິເວນຝີບວມເປັນສີຂາວຫລືຈຸດດ່າງ, ສີຂາວອົມແດງ,
ເຂົາຈະຕ້ອງໄປສະແດງໂຕແກ່ປະໂຣຫິດ. 20ປະໂຣຫິດຈະກວດເບິ່ງເພື່ອເບິ່ງວ່າເປັນເລິກກວ່າຜິວຫນັງຫລືບໍ່.
ແລະຖ້າບ່ອນນັ້ນກາຍເປັນສີຂາວຖ້າເປັນດັ່ງນັ້ນ, ປະໂຣຫິດກໍຕ້ອງປະກາດວ່າເຂົາເປັນມົນທິນ, ນັ້ນເປັນໂຣກທີ່ຕິດເຊື້ອ,
ຖ້າໂຣກນັ້ນເກີດຂຶ້ນບ່ອນຈຸດທີ່ເປັນຝີ.
21ແຕ່ປະໂຣຫິດກວາດແລ້ວເຫັນວ່າບໍ່ມີຂົນສີຂາວບ່ອນນັ້ນ, ແລະບໍ່ໄດ້ເປັນກ້ອງຜິວຫນັງຈາງໄປແລ້ວ, ປະໂຣຫິດຈະຕ້ອງກັກໂຕເຂົາໄວ້ເຈັດວັນ.
22ຖ້າໂຣກນັ້ນລາມໄປຕາມຜິວຫນັງຕາມວົງກວ້າງ, ປະໂຣຫິດຈະຕ້ອງປະກາດວ່າເຂົາເປັນມົນທິນ. ນັ້ນເປັນໂຣກທີ່ຕິດເຊື້ອ,
23ແຕ່ຖ້າຮອຍດ່າງນັ້ນຄົງຢູ່ເທົ່າເດີມ, ແລະບໍ່ລາມອອກໄປ ກໍເປັນແຄ່ຮອຍແຜເປັນຈາກຝີ, ແລະປະໂຣຫິດຕ້ອງປະກາດວ່າເຂົາສະອາດ.
24ເມື່ອຜິວຫນັງມີຮອຍໄຫມ້ ແລະ ມີບາດແຜສົດທີ່ຊີກັບບໍລິເວນນັ້ນກາຍເປັນສີຂາວຊໍ້າ, ຫລື ເປັນສີດ່າງສີຂາວ.
25ປະໂຣຫິດຈະຕ້ອງກວດເພື່ອເບິ່ງວ່າຂົນໃນຈຸດນັ້ນປ່ຽນເປັນສີຂາວຫລືບໍ່, ຖ້າປະກົດວ່າຮອຍນັ້ນຢູ່ເລິກກວ່າຊັ້ນຜິວຫນັງຖ້າມີ,
ນັ້ນກໍເປັນໂຣກທີ່ຕິດເຊື້ອ ແຜນັ້ນໄດ້ໂພງຂຶ້ນມາຕາກຮອຍໃຫມ້, ແລະ ປະໂຣຫິດຕ້ອງປະກາດວ່າເຂົາເປັນມົນທິນ. ນັ້ນຄືໂຣກທີ່ຕິດເຊື້ອ.
26ແຕ່ຖ້າຫາກປະໂຣຫິດກວດ ແລະ ພົບວ່າບໍ່ມີຂົນສີຂາວຢູ່ຈຸດນັ້ນ, ແລະບໍ່ໄດ້ເປັນພາຍໄຕ້ຜິວຫນັງ, ແຕ່ໄດ້ຈາງໄປແລ້ວນັ້ນ,
ແລ້ວປະໂຣຫິດຕ້ອງກັກໂຕເຂົາໄວ້ເຈັດວັນ. 27ແລ້ວປະໂຣຫິດຕ້ອງກວດເຂົາໃນວັນທີເຈັດ. ຖ້າລຸກລາມເປັນວົງກວ້າງເທິງຜິວຫນັງ,
ກໍໃຫ້ປະໂຣຫິດປະກາດວ່າເຂົາເປັນມົນທິນ. ນັ້ນເປັນໂຣກຕິດເຊື້ອ. 28ຖ້າຈຸດດ່າງນັ້ນຍັງຄົງທໍ່ເກົ່າ, ແລະ ບໍ່ລຸກລາມໄປຕາມຜິວແຕ່ໄດ້ຈາງລົງ,
ແລະ ຜິວຫນັງໂພງສະເພາະບ່ອນໄຟໄຫມ້, ປະໂຣຫິດຈະຕ້ອງປະກາດວ່າເຂົາສະອາດເພາະວ່າມັນເປັນພຽງແຕ່ຮອຍແຜເປັນຈາກໄຟໄຫມ້.
29ຖ້າຊາຍ ຫລື ຍິງທີ່ມີໂຣກທີ່ຕິດເຊື້ອເທິງຫົວ ຫລື ຄາງ, 30ແລ້ວປະໂຣຫິດຈະຕ້ອງກວດໂຣກທີ່ຕິດເຊື້ອຂອງຄົນນັ້ນ,
ເພື່ອເບິ່ງວ່າໂຣກນັ້ນລົງເລິກໄປກວ່າຜິວຫນັງ ຫລືບໍ່, ແລະຖ້າມີສີເຫລືອງ, ມີຂົນບາງບ່ອນຈຸດນັ້ນ. ຖ້າມີປະໂຣຫິດຕ້ອງປະກາດວ່າເປັນມົນທິນ.
ເຂົາເປັນຜື່ນຄັນ, ເປັນໂຣກທີ່ຕິດເຊື້ອເທິງຫົວ ຫລື ຄາງ.
31ຖ້າປະໂຣຫິດເປັນໂຣກຜື່ນຄັນ ແລະ ເຫັນວ່າບໍ່ເລິກກວ່າຜິວຫນັງ, ແລະ ບໍ່ມີຂົນສີດໍາຢູ່ບໍລິເວນນັ້ນ,
ແລ້ວໃຫ້ປະໂຣຫິດກັກໂຕຄົນທີ່ເປັນໂຣກຜື່ນຄັນໄວ້ເຈັດວັນ.
32ພໍເຖິງວັນທີເຈັດກໍໃຫ້ປະໂຣຫິດກວດໂຣກເພື່ອ ເບິ່ງວ່ານັ້ນລຸກລາມໄປຫລືບໍ່, ຖ້າບໍ່ມີຂົນສີເຫລືອງ, ແລະ ຖ້າໂຣກນັ້ນປະກົດແຕ່ພຽງຜິວຫນັງ,
33ແລ້ວກໍໃຫ້ຄົນນັ້ນແຖຂົນເສຍ, ແຕ່ຫ້າມແຖບໍລິເວນທີ່ເປັນໂຣກ, ແລະ ປະໂຣຫິດຕ້ອງກັກຄົນທີ່ເປັນໂຣກຜື່ນຄັນໄວ້ອີກເຈັດວັນ.
34ພໍເຖິງວັນທີເຈັດ ປະໂຣຫິດກໍຈະກວດໂຣກ ເພື່ອເບິ່ງວ່າໂຣກນັ້ນຢຸດຄຸກຄາມໄປຕາມຜິວຫນັງຫລືບໍ່, ຖ້າປະກົດວ່າບໍ່ເລິກໄປກວ່າຜິວຫນັງ,
ປະໂຣຫິດຕ້ອງປະກາດວ່າເຂົາສະອາດ. ໃຫ້ຄົນນັ້ນຊັກເສື້ອຜ້າຂອງເຂົາ, ແລ້ວເຂົາຈະສະອາດ.
35ແຕ່ຖ້າໂຣກຜື່ນຄັນນັ້ນໄດ້ລາມໄປຕາມວົງກວ້າງ ຫລື ຈາກທີ່ປະໂຣຫິດໄດ້ກ່າວວ່າເຂົາສະອາດແລ້ວ, 36ກໍຕ້ອງໃຫ້ປະໂຣຫິດກວດເຂົາອີກ.
ແຕ່ຖ້າໂຣກນັ້ນລາມໄປຮອດຜິວຫນັງແລ້ວ, ປະໂຣຫິດບໍ່ຈໍາເປັນຕ້ອງເບິ່ງຫາຂົນສີເຫລືອງ, ຄົນນັ້ນກໍເປັນມົນທິນແລ້ວ.
37ແຕ່ຖ້າໃນສາຍຕາຂອງປະໂຣຫິດ ໂຣກຜື່ນຄັນນັ້ນບໍ່ລາມ, ແລະ ມີຂົນສີດໍາງອກຢູ່ບໍລິເວນນັ້ນ, ຜື່ນຄັນນັ້ນໄດ້ຫາຍໄປແລ້ວ, ເຂົາກໍສະອາດ
ແລະ ປະໂຣຫິດຕ້ອງປະກາດວ່າເຂົາສະອາດ.

 generated on Tue Jun 17 19:01:42 2025

38ແຕ່ຖ້າຊາຍ ຫລື ຍິງທີ່ມີຮອຍຂາວທີ່ຜິວຫນັງ,39ຕ້ອງໃຫ້ປະໂຣຫິດກວດຄົນນັ້ນເພື່ອເບິ່ງວ່າຮອຍນັ້ນເປັນສີຂາວຂຸ່ນ ຫລືບໍ່,
ຊຶ່ງເປັນກັຽນທີ່ໂພງຂຶ້ນໃນຜິວຫນັງ. ເຂົາສະອາດ,
40ຖ້າຜົມຂອງຊາຍໃດຫລົ່ນຈາກຫົວຂອງເຂົາ, ເຂົາເປັນຄົນຫົວລ້ານແຕ່ເຂົາສະອາດ.41ແຕ່ຖ້າຜົມຂອງເຂົາຫລົ່ນອອກດ້ານຫນ້າຫົວຂອງເຂົາ,
ແລະຖ້າຫນ້າຜາກຂອງເຂົາລ້ານ ເຂົາສະອາດ.
42ແຕ່ຖ້າບ່ອນຫົວລ້ານ ຫລືຫນ້າຜາກລ້ານຂອງເຂົາ, ນັ້ນເປັນໂຣກທີ່ຕິດເຊື້ອທີ່ໄດ້ໂພງຂຶ້ນ.
43ແລ້ວຕ້ອງໃຫ້ປະໂຣຫິດກວດເບິ່ງເຂົາເພື່ອເບິ່ງວ່າຮອຍບວມທີ່ບໍລິເວນເປັນໂຣກເທິງຫົວລ້ານ ຫລືຫນ້າຜາກລ້ານທີ່ມີສີແດງ, ຫລື
ບໍ່ເຫມືອນກັບລັກສະນະຂອງໂຣກທີ່ຕິດເຊື້ອເທິງຜິວຫນັງ.44ຖ້າເປັນ, ແລ້ວເຂົາກໍມີໂຣກທີ່ຕິດເຊື້ອ, ແລະ ເຂົາເປັນມົນທິນ.
ປະໂຣຫິດຕ້ອງປະກາດວ່າເຂົາເປັນມົນທິນຢ່າງແນ່ນອນ ເພາະໂຣກເທິງຫົວຂອງເຂົາ.
45ຄົນທີ່ເປັນໂຣກທີ່ຕິດເຊື້ອ ຕ້ອງໃສ່ເສື້ອຜ້າຂາດ, ໃຫ້ປ່ອຍຜົມ, ແລະ ໃຫ້ເຂົາປົດຫນ້າຂອງເຂົາຈົນເຖິງດັງຂອງເຂົາ, ແລ້ວຮ້ອງວ່າ "ມົນທິນ,
ມົນທິນ."46ຕະຫລອດເວລາທີ່ເຂົາເປັນໂຣກຕິດເຊື້ອ, ເຂົາຈະເປັນມົນທິນເພາະເຂົາເປັນມົນທິນດ້ວຍໂຣກທີ່ສາມາດຕິດຕໍ່ໄດ້,
ເຂົາຈະຕ້ອງຢູ່ຄົນດຽວ. ເຂົາຕ້ອງຢູ່ພາຍນອກຄ້າຍ.
47ເມື່ອເຄື່ອງແຕ່ງກາຍເກີດມີເຊື້ອລາຂຶ້ນເປັນດວງໆ, ບໍ່ວ່າຈະເປັນເຄື່ອງແຕ່ງກາຍ ຈາກຂົນສັດຫລືຜ້າປ່ານ.
48ຫລືຕິດຢູ່ຕາມຜ້າປ່ານຕ່ອນໃດຕ່ອນຫນຶ່ງ ຫລືຜ້າຂົນສັດ, ຫລືຫນັງສັດ, ຫລືສິ່ງໃດທີ່ເຮັດດ້ວຍຫນັງສັດ.
49ຖ້າມີເຊື້ອລາທີ່ເປິະເປື້ອນເປັນສີຂຽວຫລືສີແດງໃນເຄື່ອງແຕ່ງກາຍ, ໃນຫນັງ, ຫລືດ້າຍທີ່ຫໍ ຫລືຖັກ, ຫລືສິ່ງໃດໆ,
ທີ່ເຮັດດ້ວຍຫນັງແລ້ວເປັນເຊື້ອລາທີ່ລາມໄປໄດ້; ຕ້ອງນຳສິ່ງນັ້ນໄປສະແດງຕໍ່ປະໂຣຫິດ.
50ປະໂຣຫິດຕ້ອງກວດເຊື້ອລາໃນສິ່ງນັ້ນ; ປະໂຣຫິດຕ້ອງກັກສິ່ງໃດໆ ທີ່ເປັນເຊື້ອລາໄວ້ເຈັດວັນ.51ພໍເຖິງວັນທີເຈັດ
ໃຫ້ປະໂຣຫິດກວດເບິ່ງເຊື້ອລານັ້ນອີກຄັ້ງ. ຖ້າເຊື້ອລານັ້ນລາມໄປເຖິງເຄື່ອງແຕ່ງກາຍ ຫລື ສິ່ງໃດໆ ຫລື ຫໍ ຫລື ຖັກຈາກຂົນສັດ ຫລືຜ້າປ່ານ
ຫລືຫນັງ ຫລືສິ່ງໃດກໍຕາມ, ທີ່ເຮັດດ້ວຍຫນັງ ສະແດງວ່າເປັນເຊື້ອລາອັນຕະລາຍ, ແຕ່ສິ່ງນັ້ນເປັນມົນທິນ.52ເຂົາຕ້ອງເຜົາເຄື່ອງແຕ່ງກາຍນັ້ນ
ທີ່ຫໍ ຫລື ຖັກຈາກຂົນສັດ ຫລືຜ້າປ່ານ, ຫລືຫນັງ ຫລື ສິ່ງໃດໆ ກໍຕາມທີ່ກວດພົບເຊື້ອລານັ້ນ, ເພາະອາດນຳໄປສູ່ການເປັນໂຣກໄດ້.
ສິ່ງນັ້ນຕ້ອງຖືກເຜົາໃຫ້ຫມົດໄປ.
53ຖ້າປະໂຣຫິດກວດເບິ່ງສິ່ງຂອງນັ້ນ ແລະເຫັນວ່າເຊື້ອລານັ້ນບໍ່ໄດ້ລາມໄປໃນເຄື່ອງແຕ່ງກາຍ, ຫລື ສິ່ງທີ່ຫໍ ຫລືຖັກຈາກຂົນສັດ ຫລືຜ້າປ່ານ,
ຫລື ໃນສິ່ງໃດທີ່ເຮັດດ້ວຍຫນັງ.54ປະໂຣຫິດຈະສັ່ງໃຫ້ພວກເຂົາຊັກສິ່ງທີ່ມີເຊື້ອລາ, ແລະ ປະໂຣຫິດຕ້ອງກັກສິ່ງນັ້ນໄວ້ອີກເຈັດວັນ.
55ແລ້ວປະໂຣຫິດຈະກວດເບິ່ງສິ່ງທີ່ເຄີຍເປັນເຊື້ອລາທີ່ຖືກຊັກແລ້ວ, ຖ້າເຊື້ອລານັ້ນບໍ່ປ່ຽນສີ, ແມ້ວ່າເຊື້ອລານັ້ນບໍ່ລາມອອກໄປກໍເປັນມົນທິນ.
ພວກເຈົ້າຕ້ອງເຜົາສິ່ງນັ້ນທັງຫມົດບໍ່ວ່າເກີດເຊື້ອລາຂຶ້ນບ່ອນຈຸດໃດກໍຕາມ.
56ຖ້າປະໂຣຫິດກວດເບິ່ງສິ່ງນັ້ນ, ແລະ ຖ້າເຊື້ອລານັ້ນຈາງລົງຫລັງຈາກຊັກແລ້ວ,
ກໍໃຫ້ຈີກບໍຣິເວນທີ່ເກີດຮອຍນັ້ນອອກເສຍຈາກເຄື່ອງແຕ່ງກາຍຫລືຫນັງ, ຫລື ຈາກດ້ວຍຫໍຫລືດ້າຍຖັກ.
57ຖ້າຍັງປະກົດຂຶ້ນອີກຈາກເຄື່ອງແຕ່ງກາຍ, ບໍ່ວ່າມີດ້າຍຫໍ ຫລື ດ້າຍຖັກ ຫລືໃນສິ່ງໃດໆ, ທີ່ເຮັດດ້ວຍຫນັງ, ສະແດງວ່າເຊື້ອນັ້ນລາມອອກໄປ.
ເຈົ້າຕ້ອງເຜົາສິ່ງໃດໆທີ່ມີເຊື້ອລານັ້ນ.58ເຄື່ອງແຕ່ງກາຍຫລືສິ່ງໃດໆ ທີ່ຫໍ ຫລື ຖັກດ້ວຍຂົນສັດຫລືຜ້າປ່ານ ຫລືດ້ວຍຫນັງ,
ຖ້າເຈົ້າຊັກສິ່ງນັ້ນແລ້ວເຊື້ອລານັ້ນຫມົດໄປ, ສິ່ງນັ້ນກໍຕ້ອງຖືກຊັກອີກເປັນຄັ້ງທີສອງ, ແລ້ວສິ່ງນັ້ນຈະສະອາດ.
59ນີ້ເປັນກົດເກນວ່າດ້ວຍເຊື້ອລາໃນເຄື່ອງແຕ່ງກາຍທີ່ເຮັດດ້ວຍຂົນສັດ ຫລືຜ້າປ່ານ, ຫລືສິ່ງໃດໆທີ່ຫໍ ຫລືຖັກຈາກຂົນສັດ ຫລືຜ້າປ່ານ ຫລືຫນັງ
ຫລືສິ່ງໃດໆ ທີ່ເຮັດດ້ວຍຫນັງ ເພື່ອພວກເຈົ້າຈະບໍ່ປະກາດວ່າສິ່ງໃດທີ່ເຮັດດ້ວຍຫນັງ, ເພື່ອພວກເຈົ້າຈະໄດ້ປະກາດວ່າສິ່ງໃດສະອາດ ຫລື
ສິ່ງໃດເປັນມົນທິນ."


generated on Tue Jun 17 19:01:42 2025

14 1 ພຣະຢາເວໄດ້ກ່າວແກ່ໂມເຊວ່າ, 2 "ນີ້ເປັນກົດເກນໃນວັນຊໍາລະໂຕຂອງຄົນທີ່ເຄີຍເປັນໂຣກ. ຕ້ອງນໍາເຂົາເຂົ້າມາຫາປະໂຣຫິດ.

3 ແລ້ວປະໂຣຫິດຈະອອກໄປນອກຄ້າຍເພື່ອກວດເບິ່ງຄົນນັ້ນ ຖ້າໂຣກຜິວຫນັງຕິດເຊື້ອນັ້ນຫາຍດີ.
4 ແລ້ວປະໂຣຫິດຈະສັ່ງໃຫ້ຄົນຊໍາລະໂຕໃຫ້ນໍານົກທີ່ສະອາດ, ແລະ ມີຊີວິດຢູ່ມາສອງໂຕ, ໄມ້ສົນສີດາ, ດ້າຍສີແດງ, ແລະ ໃບຫູສົບມັດຫນຶ່ງ.
5 ປະໂຣຫິດຈະສັ່ງໃຫ້ເຂົາຂ້ານົກໂຕຫນຶ່ງໃສ່ນໍ້າທີ່ສະອາດຢູ່ໃນຫມໍ້ດິນ.
6 ແລ້ວປະໂຣຫິດເອົານົກທີ່ມີຊີວິດອີກໂຕ, ແລະໄມ້ສົນສີດາ, ແລະດ້າຍແດງ, ແລະຕົ້ນໃບຫູສົບ, ແລ້ວເຂົາຈະຈຸ່ມທັງຫມົດນີ້,
ລວມເຖິງນົກທີ່ມີຊີວິດຢູ່ໃນເລືອດຂອງນົກໂຕມີຊີວິດຢູ່, ໃນເລືອດຂອງນົກໂຕທີ່ຖືກຂ້າຢູ່ນໍ້າທີ່ສະອາດ.
7 ແລ້ວປະໂຣຫິດຈະຊິດນໍ້ານີ້ໃສ່ຄົນທີ່ຊໍາລະໂຕຈາກໂຣກເຈັດຄັ້ງ, ແລະ ແລ້ວປະໂຣຫິດປະກາດວ່າເຂົາດີສະອາດຈາກໂຣກພະຍາດ.
ແລ້ວປະໂຣຫິດຈະປ່ອຍນົກໂຕທີ່ມີຊີວິດໄປໃນທ້ອງທົ່ງ.
8 ຄົນທີ່ໄດ້ຮັບການຊໍາລະຈະຊັກເສື້ອຜ້າຂອງເຂົາ, ໂກນຜົມແລະຂົນທັງຫມົດຂອງເຂົາ, ແລະອາບນໍ້າ, ແລ້ວເຂົາຈະສະອາດ.
ຫລັງຈາກນັ້ນເຂົາຕ້ອງບໍ່ເຂົ້າມາໃນຄ້າຍ, ແຕ່ເຂົາຈະຢູ່ພາຍນອກເຕັນທີ່ພັກຂອງເຂົາເຈັດວັນ.
9 ພໍເຖິງວັນທີເຈັດເຂົາຕ້ອງແຖຜົມທັງຫມົດທີ່ຢູ່ຫົວຂອງເຂົາ, ແລະເຂົາຕ້ອງແຖຫນວດແລະຄິ້ວດ້ວຍ. ເຂົາຕ້ອງໂກນຂົນທັງຫມົດຂອງເຂົາ,
ແລະເຂົາຕ້ອງຊັກເສື້ອຜ້າຂອງເຂົາແລະອາບນໍ້າແລ້ວເຂົາຈະສະອາດ.
10 ໃນວັນທີແປດເຂົາຕ້ອງເອົາລູກແກະໂຕຜູ້ທີ່ປາສະຈາກຕໍາຫນິມາສອງໂຕ, ແລະ ລູກແກະໂຕເມຍອາຍຸຫນຶ່ງປີທີ່ປາສະຈາກຕໍາຫນິ. ແລະ
ແປ້ງຢ່າງດີປົນນໍ້າມັນຫມາກກອກເທດສອງກິໂລກຣາມ, ແລະ ນໍ້າມັນຫມາກກອກເທດເຄິ່ງລິດ.
11 ປະໂຣຫິດຜູ້ທີ່ເຮັດພິທີຊໍາລະຈະນໍາຜູ້ທີ່ເຮັດການຊໍາລະໂຕມາຢືນຕໍ່ພຣະພັກພຣະຢາເວ. ພ້ອມກັບສິ່ງຂອງເຫລົ່ານັ້ນທີ່ທາງເຂົ້າເຕັນນັດພົບ.
12 ປະໂຣຫິດຈະເອົາລູກແກະໂຕຜູ້ໂຕຫນຶ່ງຖວາຍເປັນເຄື່ອງບູຊາໄຖ່ຄວາມຜິດ, ພ້ອມກັບນໍ້າມັນຫນຶ່ງໃນສາມລິດ,
ເຂົາຈະຍໍສິ່ງຂອງເຫລົ່ານັ້ນເພື່ອເປັນເຄື່ອງຍົກຍໍບູຊາຖວາຍແດ່ພຣະຢາເວ.
13 ປະໂຣຫິດຕ້ອງຂ້າລູກແກະໂຕຜູ້ໃນສະຖານທີ່ໃຊ້ຂ້າເຄື່ອງບູຊາລົບລ້າງບາບ, ແລະເຄື່ອງບູຊາໃນບໍລິເວນສັກສິດ,
ແລະເຄື່ອງບູຊາລົບລ້າງບາບຕົກເປັນຂອງປະໂຣຫິດ. ເຊັ່ນດຽວກັບເຄື່ອງບູຊາໄຖ່ຄວາມຜິດ ເພາະເປັນສິ່ງທີ່ບໍຣິສຸດທີ່ສຸດ.
14 ປະໂຣຫິດຈະນໍາເລືອດບາງສ່ວນຂອງເຄື່ອງບູຊາໄຖ່ຄວາມຜິດ, ແລະ ໄປເຈີມປາຍຫົວດ້ານຂວາຂອງຄົນທີ່ຮັບການຊໍາລະໂຕ,
ແລະເຈີມຫົວໂປ້ມືຂວາ, ແລ້ວ ນີ້ວໂປ້ຕີນເບື້ອງຂວາ. 15 ແລ້ວປະໂຣຫິດຈະເອົານໍ້າມັນຈາກຫນຶ່ງໃນສາມລິດນັ້ນຖອກລົງຝາມືຊ້າຍຂອງຕົນແນ່,
16 ແລະ ເອົານິ້ວມືຂວາເຂົາຈຸ່ມລົງນໍ້າມັນທີ່ຢູ່ໃນມືຊ້າຍຂອງເຂົາ, ແລະ ຊິດນໍ້າມັນດ້ວຍນິ້ວຂອງເຂົາເຈັດຄັ້ງຕໍ່ພຣະພັກພຣະຢາເວ.
17 ປະໂຣຫິດຈະເອົານໍ້າມັນທີ່ເຫລືອໃນມືຂອງເຂົາໄປແຕະປາຍຫູດ້ານຂວາຂອງຄົນທີ່ຮັບການຊໍາລະໂຕ, ແລະຫົວໂປມືຂວາ,
ແລະຫົວໂປ້ຕີນເບື້ອງຂວາ, ເຂົາຕ້ອງເຈີມນໍ້າມັນທີ່ທັບຢູ່ເລືອດຂອງເຄື່ອງບູຊາໄຖ່ຄວາມຜິດ. 18 ແລ້ວນໍ້າມັນໃນມືຂອງປະໂຣຫິດ,
ເຂົາກໍຈະເຈີມຢູ່ຫົວຂອງຄົນທີ່ຮັບການຊໍາລະໂຕ, ແລ້ວປະໂຣຫິດຈະເຮັດການລົບລ້າງມົນທິນຕໍ່ພຣະພັກພຣະຢາເວ.
19 ແລ້ວປະໂຣຫິດຈະຖວາຍເຄື່ອງບູຊາລົບລ້າງບາບ ແລະ ເຮັດການລົບມົນທິນ ສໍາລັບຄົນທີ່ຮັບການຊໍາລະໂຕເນື່ອງມາຈາກມົນທິນຂອງເຂົາ,
ແລະ ຫລັງຈາກນັ້ນເຂົາຈະຂ້າເຄື່ອງເຜົາບູຊາ, 20 ແລ້ວປະໂຣຫິດຈະຖວາຍເຄື່ອງເຜົາບູຊາ, ແລະ ເຄື່ອງບູຊາເທິງແທ່ນບູຊາ,
ແລ້ວປະໂຣຫິດຈະເຮັດການລົບລ້າງມົນທິນສໍາລັບຄົນນັ້ນ, ແລ້ວເຂົາຈະສະອາດ.
21 ຢ່າງໃດກໍຕາມ, ຖ້າຄົນນັ້ນຂັດສົນ ແລະບໍ່ສາມາດຫາເຄື່ອງບູຊາເຫລົ່ານີ້ມາໄດ້, ກໍໃຫ້ເຂົາເອົາລູກແກະໂຕຜູ້ມາໂຕຫນຶ່ງ
ເພື່ອເປັນເຄື່ອງບູຊາໄຖ່ຄວາມຜິດທີ່ຈະໃຊ້ຍົກຍໍຖວາຍ, ເພື່ອການລົບລ້າງມົນທິນເພື່ອໂຕເຂົາເອງ, ແລະ
ເອົາແປ້ງຢ່າາງດີມາປະສົມກັບນໍ້າມັນຫນຶ່ງກິໂລກຣາມເທົ່ານັ້ນເພື່ອຖວາຍເປັນເຄື່ອງບູຊາ, ແລະ ນໍ້າມັນຫນຶ່ງໃນສາມລິດ.
22 ພ້ອມກັບນົກເຂົາສອງໂຕ ຫລືນົກພິລາບສອງໂຕ, ທີ່ເຂົາສາມາດຫາມາໄດ້ນົກໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບ, ແລະ
ອີກໂຕຈະເປັນເຄື່ອງເຜົາບູຊາ. 23 ໃນວັນທີແປດ ໃຫ້ເຂົານໍາມາມອບໃຫ້, ປະໂຣຫິດສໍາລັບການຊໍາລະໂຕທີ່ທາງເຂົ້າເຕັນນັດພົບ,
ຕໍ່ພຣະພັກພຣະຢາເວ.
24 ປະໂຣຫິດຈະເອົາລູກແກະສໍາລັບເຄື່ອງບູຊາມາ, ແລະ ເຂົາຈະເອົານໍ້າມັນຫມາກກອກຫນຶ່ງໃນສາມລິດມາດ້ວຍ, ແລະ
ເຂົາຈະຊູສິ່ງຂອງເຫລົ່ານັ້ນຂຶ້ນສູງດັ່ງວ່າເຂົາຖວາຍສິ່ງຂອງເຫລົ່ານັ້ນແດ່ພຣະຢາເວ.
25 ແລ້ວເຂົາຈະຂ້າລູກແກະເພື່ອເປັນເຄື່ອງບູຊາໄຖ່ຄວາມຜິດ, ແລະ
ເຂົາຈະເອົາເລືອດບາງສ່ວນຂອງເຄື່ອງບູຊາໄຖ່ຄວາມຜິດໄປແຕະປາຍຫູສໍາລັບຄົນທີ່ຮັບການຊໍາລະໂຕ, ແລະ ເຈີມຫົວໂປ້ມືເບື້ອງຂວາ, ແລະ
ຫົວໂປ້ຕີນຂອງເຂົາ.
26 ແລ້ວປະໂຣຫິດຈະຖອກນໍ້າມັນໃສ່ບາງສ່ວນໃສ່ມືຊ້າຍຂອງຕົນ. 27 ແລະ
ເຂົາຈະໃຊ້ນິ້ວມືຂວາຂອງເຂົາຊິດນໍ້າມັນທີ່ຢູ່ໃນມືຊ້າຍຂອງເຂົາເຈັດຄັ້ງຕໍ່ພຣະພັກພຣະຢາເວ.
28 ແລ້ວປະໂຣຫິດຈະເອົານໍ້າມັນບາງສ່ວນໃນມືຂອງເຂົາ ໄປແຕະທີ່ຫູຂວາຂອງຄົນທີ່ຮັບການຊໍາລະໂຕ, ແລະ ເຈີມຢູ່ຫົວໂປ້ມືຂວາ,
ແລະຫົວໂປ້ຕີນຂວາຂອງເຂົາ, ຈຸດດຽວກັນກັບທີ່ເຂົາໄດ້ເຈີມດ້ວຍເລືອດຂອງເຄື່ອງບູຊາໄຖ່ຄວາມຜິດ.
29 ປະໂຣຫິດຈະເອົານໍ້າມັນທີ່ເຫລືອໃນມືຂອງເຂົາເຈີມຢູ່ຫົວຂອງຄົນຊໍາລະໂຕ ເພື່ອການລົບລ້າງມົນທິນຂອງເຂົາຕໍ່ພຣະພັກພຣະຢາເວ.
30 ເຂົາຕ້ອງຖວາຍນົກເຂົາ ຫລືນົກພິລາບຫນຶ່ງໂຕ, ເທົ່າທີ່ຄົນຈະສາມາດຫາມາໄດ້ - 31 ຫນຶ່ງໂຕໃຫ້ເປັນເຄື່ອງບູຊາລົບລ້າງບາບ. ແລະ
ອີກໂຕຫນຶ່ງໃຫ້ເປັນເຄື່ອງເຜົາບູຊາ. ແລ້ວປະໂຣຫິດຈະເຮັດການລົບລ້າງມົນທິນສໍາລັບຄົນທີ່ຮັບການຊໍາລະໂຕຕໍ່ພຣະພັກພຣະຢາເວ.
32 ນີ້ຄືກົດເກນຂອງຄົນເປັນໂຣກຜິວຫນັງທີ່ຕິດເຊື້ອ, ຜູ້ທີ່ບໍ່ສາມາດຫາເຄື່ອງບູຊາສໍາລັບການຊໍາລະໂຕຂອງເຂົາໄດ້ຕາມປົກກະຕິ."
33 ພຣະຢາເວໄດ້ກ່າວແກ່ໂມເຊ ແລະ ແກ່ອາໂຣນວ່າ, 34 "ເມື່ອພວກເຈົ້າເຂົ້າໄປໃນແຜ່ນດິນຄານາອານ
ຊຶ່ງເຮົາໄດ້ມອບໃຫ້ເປັນກໍາມະສິດແກ່ພວກເຈົ້າແລ້ວ, ແລະ
ຖ້າເຮົາໄດ້ໃຫ້ເຊື້ອລາທີ່ລຸກລາມໃນບ້ານຫລັງຫນຶ່ງໃນແຜ່ນດິນທີ່ພວກເຈົ້າຖືກໍາມະສິດນັ້ນ, 35 ແລ້ວໃຫ້ເຈົ້າຂອງບ້ານ ຕ້ອງມາບອກປະໂຣຫິດ.
ເຂົາຕ້ອງແຈ້ງວ່າ, 'ມີບາງສິ່ງທີ່ເບິ່ງຄືເຊື້ອລາຢູ່ໃນບ້ານຂອງຂ້ານ້ອຍ.'

36 ແລ້ວປະໂຣຫິດຈະສັ່ງໃຫ້ພວກເຂົາເຮັດໃຫ້ບ້ານວ່າງເປົ່າກ່ອນປະໂຣຫິດຈະໄປເບິ່ງຮ່ອງຮອຍເຊື້ອລາ,
ເພື່ອຈະບໍ່ເຮັດໃຫ້ສິ່ງໃດໃນບ້ານເຮັດໃຫ້ເປັນມົນທິນ, ຫລັງຈາກນັ້ນປະໂຣຫິດຕ້ອງຍ່າງເຂົ້າໄປເບິ່ງບ້ານ.
37 ເຂົາຕ້ອງກວດເບິ່ງວ່າເຊື້ອນັ້ນຢູ່ຝາເຮືອນຫລືບໍ່ ແລະເບິ່ງວ່າປະກົດມີຮອຍສີຂຽວຫລືສີແດງເລິກໄປໃນຝາເຮືອນຫລືບໍ່. 38 ຖ້າບ້ານນັ້ນມີເຊື້ອລາ,
ປະໂຣຫິດຈະອອກຈາກບ້ານ ແລະປິດປະຕູບ້ານໄວ້ເຈັດວັນ.
39 ພໍເຖິງວັນທີເຈັດ, ປະໂຣຫິດກໍຈະກັບມາອີກຄັ້ງ, ແລະກວດເບິ່ງວ່າເຊື້ອລາໄດ້ລຸກລາມໄປຕາມຜາບ້ານຫລືບໍ່.
40 ຖ້າລຸກລາມປະໂຣຫິດກໍຈະສັ່ງໃຫ້ເຂົາຮື້ກ້ອນຫີນທີ່ພົບວ່າມີເຊື້ອນັ້ນອອກ, ແລະເອົາໄປຖິ້ມໃນທີ່ ທີ່ເປັນມົນທິນຢູ່ນອກເມືອງ.
41 ແລະສັ່ງໃຫ້ຂູດຝາທາງໃນເຮືອນທັງຫມົດອອກ, ແລະ
ພວກເຂົາຕ້ອງເອົາຜົງທີ່ຂູດອອກທີ່ເຈືອປົນດ້ວຍເຊື້ອນັ້ນອອກໄປຖິ້ມນອກເມືອງໃນສະຖານທີ່ ທີ່ເປັນມົນທິນ.
42 ພວກເຂົາຕ້ອງເອົາຫີນອື່ນໃສ່ເຂົ້າໄປແທນທີ່ກ້ອນຫີນທີ່ຖືກນໍາອອກໄປ, ແລະ ພວກເຂົາຕ້ອງເອົາຂີ້ຕົມໃຫມ່ມາສາບເຮືອນນັ້ນ.
43 ຖ້າເຊື້ອລານັ້ນກັບມາເກີດຂຶ້ນອີກແລະລຸກລາມໄປໃນບ້ານທີ່ເອົາກ້ອນຫີນອອກໄປຖິ້ມແລ້ວ.
44 ປະໂຣຫິດເຂົ້າມາກວດບ້ານເພື່ອວ່າເຊື້ອລາໄດ້ລຸກລາມບ້ານຫລືບໍ່, ຖ້າລຸກລາມ, ນັ້ນເປັນເຊື້ອລາທີ່ເປັນອັນຕະລາຍ, ບ້ານນັ້ນກໍເປັນມົນທິນ.
45 ເຮືອນນັ້ນຈະຕ້ອງຖືກຮື້ລົງ. ກ້ອນຫີນ, ໄມ້, ແລະ ທັງຫມົດທີ່ສາບໃນເຮືອນທັງຫມົດຈະຕ້ອງຖືກນໍາເອົາອອກໄປນອກເມືອງ, ໄປຍັງສະຖານທີ່
ທີ່ເປັນມົນທິນ. 46 ຍິ່ງກວ່ານັ້ນ, ໃຜກໍຕາມທີ່ເຂົ້າໄປເຮືອນນັ້ນໃນຂະນະທີ່ເຮືອນຍັງປິດຢູ່, ກໍເປັນມົນທິນໄປຈົນຮອດຕອນແລງ.
47 ທຸກຄົນທີ່ນອນຫລັບໃນເຮືອນຫລັງນັ້ນຕ້ອງຊັກເສື້ອຜ້າຂອງເຂົາ ແລະ ທຸກຄົນທີ່ກິນໃນເຮືອນຫລັງນັ້ນຕ້ອງຊັກເສື້ອຜ້າຂອງເຂົາ.
48 ຖ້າປະໂຣຫິດເຂົ້າໄປໃນເຮືອນດັ່ງກ່າວ ຫລືກວດເບິ່ງວ່າມີເຊື້ອລາລຸກລາມໃນເຮືອນ ຫລື ບໍ່, ຫລັງຈາກທີ່ເຮືອນຫລັງນັ້ນໄດ້ສາບໃຫມ່ແລ້ວ,
ຖ້າເຊື້ອລາໄດ້ຫາຍໄປ, ປະໂຣຫິດກໍຈະປະກາດວ່າເຮືອນຫລັງນັ້ນສະອາດ.
49 ປະໂຣຫິດຈະຕ້ອງເອົານົກມາສອງໂຕເພື່ອເຮັດການຊໍາລະເຮືອນ, ແລະ ໄມ້ສົນສີດາ, ດ້າຍສີແດງ, ແລະຕົ້ນຫູສົບ.
50 ເຂົາຈະຂ້ານົກໂຕຫນຶ່ງເທິງນ້ໍາທີ່ສະອາດໃນໂຖດິນ. 51 ເຂົາຈະເອົາໄມ້ສົນສີດາ, ຕົ້ນຫູສົບ, ເຂົາຈະຂ້ານົກໂຕຫນຶ່ງເທິງນໍ້າທີ່ສະອາດ,
ເພິ່ນຈະຊິດເລືອດນົກນັ້ນໃສ່ເຮືອນເຈັດເທື່ອ.
52 ປະໂຣຫິດຈະຊໍາລະເຮືອນຫລັງນັ້ນດ້ວຍເລືອດຂອງນົກ, ແລະ ດ້ວຍນໍ້າສະອາດ, ດ້ວຍນົກທີ່ມີຊີວິດໄມ້ສົນສີດາ, ຕົ້ນຫູສົບ, ແລະ
ດ້າຍສີແດງ. 53 ແຕ່ເຂົາຈະປ່ອຍນົກທີ່ມີຊີວິດອອກຈາກເມືອງໄປສູ່ທົ່ງຫົ້າ, ດ້ວຍວິທີນີ້ປະໂຣຫິດຕ້ອງການລົບລ້າງມົນທິນ, ສໍາລັບເຮືອນນັ້ນ, ແລະ
ເຮືອນນັ້ນກໍສະອາດ.
54 ນີ້ເປັນກົດຂອງໂຣກຜິວຫນັງທີ່ຕິດເຊື້ອທຸກຊະນິດ, ແລະ ທຸກສິ່ງທີ່ເຮັດໃຫ້ເກີດໂຣກແບບນັ້ນ, ແລະ ສໍາລັບໂຣກຜື່ນຄັນ. 55 ແລະ
ສໍາລັບເຊື້ອລາໃນເສື້ອຜ້າ ແລະ ໃນເຮືອນ. 56 ສໍາລັບຮອຍບວມ, ສໍາລັບຜື່ນຄັນ, ແລະສໍາລັບຮອຍດ່າງ. 57 ເພື່ອກໍານົດໃນກໍລະນີເຫລົ່ານີ້ວ່າ
ເມື່ອໃດເປັນມົນທິນ ຫລືເມື່ອໃດສະອາດ, ນີ້ຄືກົດສໍາລັບໂຣກຜິວຫນັງທີ່ຕິດເຊື້ອ, ແລະ ເຊື້ອລາ."


generated on Tue Jun 17 19:01:42 2025

# 15

[1]ພຣະຢາເວໄດ້ກ່າວແກ່ໂມເຊ ແລະອາໂຣນວ່າ,[2]"ຈົ່ງເວົ້າແກ່ຄົນອິດສະຣາເອນ, ແລະບອກພວກເຂົາວ່າ,
"ເມື່ອຊາຍໃດມີຂອງແຫລວທີ່ຕິດເຊື້ອໄຫລອອກຈາກຮ່າງກາຍຂອງເຂົາ, ເຂົາກໍເປັນມົນທິນ.
[3]ມົນທິນຂອງເຂົາເກີດຂຶ້ນເພາະຂອງແຫລວໄຫລອອກຈາກຮ່າງກາຍຂອງເຂົາ ຫລື ໄດ້ຢຸດແລ້ວກໍຕາມ, ສິ່ງນີ້ເປັນມົນທິນ.

[4]ຕຽງນອນທຸກຕຽງທີ່ເຂົາຈະນອນເປັນມົນທິນ, ແລະທຸກສິ່ງທີ່ເຂົານັ່ງກໍຈະເປັນມົນທິນ.
[5]ຄົນໃດທີ່ແຕະຕ້ອງຕຽງຂອງເຂົາຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳ ແລະຈະເປັນມົນທິນໄປຈົນຮອດຕອນແລງ.
[6]ຄົນໃດທີ່ໄປນັ່ງເທິງສິ່ງໃດທີ່ຊາຍຜູ້ມີຂອງແຫລວຕິດເຊື້ອໄຫລອອກກ່ອນໄດ້ນັ່ງກ່ອນນັ້ນ,
ຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳແລະເຂົາຈະເປັນມົນທິນໄປຈົນຮອດຕອນແລງ.[7]ຄົນໃດທີ່ຈັບຕ້ອງຄົນທີ່ມີຂອງແຫລວໄຫລອອກ,
ຕ້ອງຊັກເສື້ອຜ້າຂອງຕົນ, ແລະອາບນ້ຳ ແລະເປັນມົນທິນໄປຈົນຮອດຕອນແລງ.
[8]ຖ້າຄົນໃດທີ່ມີຂອງແຫລວແບບນັ້ນໄຫລອອກໄປຖົ່ມນ້ຳລາຍໃສ່ບາງຄົນທີ່ສະອາດ, ຄົນທີ່ຖືກຖົ່ມນ້ຳລາຍຕ້ອງຊັກເສື້ອຜ້າຂອງຕົນ, ແລະອາບນ້ຳ
ແລະຈະເປັນມົນທິນໄປຈົນຮອດຕອນແລງ.[9]ສິ່ງໃດທີ່ຜູ້ທີ່ມີຂອງແຫລວໄຫລອອກເອົາໄປນັ່ງທັບກໍຈະເປັນມົນທິນ.
[10]ຄົນໃດທີ່ແຕະຕ້ອງສິ່ງໃດໆ, ທີ່ຮອງຮັບຄົນທີ່ເປັນມົນທິນນັ້ນ ຄົນນັ້ນຈະຕ້ອງເປັນມົນທິນໄປຈົນຮອດຕອນແລງ.
ແລະຄົນທີ່ຈັບຕ້ອງສິ່ງນັ້ນຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳແລະເຂົາຈະເປັນມົນທິນໄປຈົນຮອດຕອນແລງ.
[11]ຄົນໃດທີ່ຖືກສິ່ງທີ່ຈັບຕ້ອງສິ່ງທີ່ໄຫລອອກຖືກໂຕໂດຍທີ່ເຂົາບໍ່ໄດ້ລ້າງມືຂອງເຂົາກ່ອນ, ຜູ້ຖືກແຕະຕ້ອງນັ້ນຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳ,
ແລະເຂົາຈະເປັນມົນທິນໄປຈົນຮອດຕອນແລງ.[12]ພາຊະນະດິນທຸກອັນທີ່ຜູ້ມີຂອງແຫລວໄຫລອອກເຊັ່ນນັ້ນແຕະຕ້ອງ ໃຫ້ທຸບເສຍ,
ແລະພາຊະນະໄມ້ທຸກອັນຕ້ອງລ້າງໃນນ້ຳ.
[13]ເມື່ອຄົນທີ່ມີສິ່ງທີ່ໄຫລອອກມາໄດ້ຊຳລະສິ່ງທີ່ໄຫລອອກມາຂອງເຂົາແລ້ວ, ເຂົາຕ້ອງນັບການຊຳລະຂອງເຂົາໃຫ້ຄົບເຈັດວັນ,
ແລະເຂົາຕ້ອງຊັກເສື້ອຜ້າຂອງຕົນ, ແລະອາບນ້ຳໃນທີ່ທີ່ມີນ້ຳໄຫລ ແລ້ວເຂົາຈຶ່ງຈະສະອາດກ[14]ໃນວັນທີແປດ, ໃຫ້ເຂົາເອົານົກສອງໂຕ
ແລະມາຂ້າຕໍ່ພຣະພັກພຣະຢາເວທີ່ທາງເຂົ້າເຕັນນັດພົບ. ແລະມອບນົກເຫລົ່ານັ້ນໃຫ້ແກ່ປະໂຣຫິດ.[15]ໃຫ້ປະໂຣຫິດຖວາຍນົກເຫລົ່ານັ້ນ.
ໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບ. ແລະອີກໂຕຫນຶ່ງເປັນເຄື່ອງເຜົາບູຊາ.
ແລະໃຫ້ປະໂຣຫິດເຮັດການລົບລ້າງມົນທິນໃນເລື່ອງທີ່ໄຫລອອກໃຫ້ແກ່ເຂົາ ຕໍ່ພຣະພັກພຣະຢາເວ.
[16]ຊາຍຄົນໃດໄດ້ຫລັ່ງນ້ຳກາມ ໃຫ້ເອົານ້ຳອາບທັງໂຕ, ແລະເຂົາຈະເປັນມົນທິນໄປຈົນຮອດຕອນແລງ.
[17]ເຄື່ອງແຕ່ງກາຍທຸກຊະນິດຫລືຫນັງທຸກຊະນິດທີ່ນ້ຳກາມໄຫລໃສ່ຕ້ອງຊັກລ້າງດ້ວຍນ້ຳ ແລະເປັນມົນທິນໄປຈົນຮອດຕອນແລງ.
[18]ຖ້າຍິງແລະຊາຍຫລັບນອນນຳກັນ ແລະຫລັ່ງນ້ຳກາມໃສ່ຍິງພວກເຂົາຕ້ອງອາບນ້ຳ ແລະພວກເຂົາຈະເປັນມົນທິນໄປຈົນຮອດຕອນແລງ.
[19]ເມື່ອຍິງໃດມີປະຈຳເດືອນ, ມົນທິນຂອງນາງຕໍ່ເນື່ອງໄປເຈັດວັນ, ແລະຜູ້ໃດແຕະຕ້ອງນາງຈະເປັນມົນທິນໄປຈົນຮອດຕອນແລງ.
[20]ທຸກສິ່ງທີ່ເປັນຂອງນາງໄປນອນທັບຂະນະທີ່ມີປະຈຳເດືອນກໍເປັນມົນທິນ; ທຸກສິ່ງທີ່ໄປນັ່ງທັບກໍເປັນມົນທິນດ້ວຍ.
[21]ຄົນໃດທີ່ໄປແຕະຕ້ອງບ່ອນນອນຂອງນາງຕ້ອງຊັກເສື້ອຜ້າຕົນແລະອາບນ້ຳ, ແລະຄົນນັ້ນຈະເປັນມົນທິນໄປຈົນຮອດຕອນແລງ.
[22]ຄົນໃດທີ່ແຕະຕ້ອງສິ່ງໃດໆ, ທີ່ນາງນັ່ງຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳ ແລະຄົນນັ້ນຈະເປັນມົນທິນໄປຈົນຮອດຕອນແລງ.
[23]ບໍ່ວ່າຈະເປັນບ່ອນນອນຫລືສິ່ງໃດກໍຕາມທີ່ນາງເຕັ່ງ ຖ້າຊາຍຄົນໃດໄປແຕະຕ້ອງສິ່ງນັ້ນຄົນນັ້ນກໍເປັນມົນທິນໄປຈົນຮອດຕອນແລງ.
[24]ຖ້າຊາຍຄົນໃດນອນຫລັບກັບນາງ, ແລະມົນທິນຂອງນາງໄຫລຕິດທີ່ຊາຍນັ້ນ, ຊາຍນັ້ນກໍເປັນມົນທິນໄປເຈັດວັນ,
ບ່ອນນອນທຸກແຫ່ງທີ່ຊາຍຄົນນັ້ນໄປນອນກໍຈະເປັນມົນທິນ.
[25]ຖ້າຍິງຄົນໃດມີເລືອດໄຫລອອກມາຫລາຍມື້, ທັ້ງທີ່ບໍ່ແມ່ນຊ່ວງທີ່ເປັນປະຈຳເດືອນຂອງນາງ,
ຫລືມີເລືອດໄຫລອອກນອກເຫນືອຊ່ວງປະຈຳເດືອນຂອງນາງ, ໃນວັນທີ່ມີມົນທິນຂອງນາງໄຫລອອກ
ນາງກໍເປັນຄືກັບຊ່ວງທີ່ນາງເປັນປະຈຳເດືອນຂອງນາງ, ຊຶ່ງເຮັດໃຫ້ນາງເປັນມົນທິນ.[26]ທຸກບ່ອນທີ່ນາງໄດ້ນອນໃນຂະນະທີ່ນາງມີເລືອດໄຫລອອກ,
ກໍຈະເປັນເຫມືອນບ່ອນນອນຂອງນາງທີ່ມີປະຈຳເດືອນຂອງນາງ
ແລະທຸກສິ່ງທີ່ນາງນັ່ງທັບຈະເປັນຢ່າງດຽວກັບມົນທິນຂອງປະຈຳເດືອນຂອງນາງ.[27]ຄົນໃດແຕະຕ້ອງສິ່ງເຫລົ່ານັ້ນກໍຈະເປັນມົນທິນ,
ຊາຍນັ້ນຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳ ແລະເຂົາຈະເປັນມົນທິນໄປຈົນຮອດຕອນແລງ.
[28]ແຕ່ຖ້າຊຳລະດ້ວຍເລືອດທີ່ໄຫລອອກຂອງລາວແລ້ວ, ໃຫ້ລາວນັບເອງໃຫ້ຄົບເຈັດວັນ, ຕໍ່ຈາກນັ້ນນາງຈຶ່ງສະອາດ,
[29]ໃນວັນທີແປດໃຫ້ນາງນຳເອົານົກສອງໂຕຫລືນົກພິລາບສອງໂຕ, ແລະເອົາໄປໃຫ້ປະໂຣຫິດທີ່ທາງເຂົ້າເຕັນນັດພົບ,
[30]ປະໂຣຫິດຈະຖວາຍເຄື່ອງບູຊາຫນຶ່ງເປັນເຄື່ອງບູຊາລົບລ້າງບາບ, ແລະອີກໂຕຫນຶ່ງເປັນເຄື່ອງເຜົາບູຊາ,
ແລະປະໂຣຫິດຈະເຮັດການລົບລ້າງມົນທິນຂອງນາງໃນເລື່ອງທີ່ເປັນມົນທິນອັນເນື່ອງມາຈາກມີເລືອດໄຫລອອກ, ຕໍ່ພຣະພັກພຣະຢາເວ.
[31]ນີ້ແມ່ນວິທີທີ່ພວກເຈົ້າຕ້ອງໃຊ້ແຍກຄົນອິດສະຣາເອນຈາກການເປັນມົນທິນຂອງເຂົາທັງຫລາຍ,
ເພື່ອພວກເຂົາຈະບໍ່ຕາຍຍ້ອນມົນທິນຂອງພວກເຂົາ, ໂດຍການເຮັດໃຫ້ສະຖານທີ່ສັກສິດຂອງເຂົາເປັນມົນທິນ.
[32]ເຫລົ່ານີ້ເປັນລະບຽບກ່ຽວກັບຜູ້ໃດທີ່ມີຂອງແຫລວໄຫລອອກ, ແລະກ່ຽວກັບຊາຍໃດທີ່ລັ່ງນ້ຳກາມອອກຊຶ່ງເຮັດໃຫ້ໂຕຂອງເຂົາເປັນມົນທິນ.
[33]ແລະກ່ຽວກັບຍິງທີ່ມີປະຈຳເດືອນ, ກ່ຽວກັບຜູ້ຊາຍທີ່ມີຂອງແຫລວໄຫລອອກບໍ່ວ່າຊາຍຫລືຍິງ, ແລະຊາຍທີ່ຫລັບນອນກັບຍິງທີ່ເປັນມົນທິນ.


generated on Tue Jun 17 19:01:42 2025

# 16

[1]ພຣະຢາເວໄດ້ກ່າວແກ່ໂມເຊ - ຫລັງຈາກການເສຍຊີວິດຂອງລູກສອງຄົນຂອງອາໂຣນ, ເມື່ອພວກເຂົາໄດ້ເຂົ້າມາໃກ້ພຣະຢາເວ
ແລ້ວເຖິງແກ່ຄວາມຕາຍ.[2]ພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງເວົ້າກັບອາໂຣນນ້ອງຊາຍຂອງເຈົ້າ, ແລະບອກເຂົາວ່າ,
ຈົ່ງຢ່າເຂົ້າໄປໃນບ່ອນທີ່ສັກສິດທີ່ສຸດຕາມໃຈມັກຄືເຂົ້າໄປໃນມ່ານຜ້າຫນ້າຝາຫີບແຫ່ງການລົບລ້າງມົນທິນບາບຊຶ່ງຕິດຢູ່ເທິງຫີບພຣະບັນຍັດ.
ຖ້າເຂົາເຂົ້າໄປເຂົາຈະຕາຍ, ເພາະວ່າທີ່ນັ້ນແມ່ນບ່ອນທີ່ເຮົາປະກົດໃນເມກ, ເຫນືອຝາອັດຫີບແຫ່ງການລົບລ້າງມົນທິນບາບ.

[3]ດັ່ງນັ້ນນີ້ແມ່ນສິ່ງທີ່ອາໂຣນໄດ້ເຮັດເມື່ອເຂົ້າມາໃນສະຖານທີ່ບໍຣິສຸດ,
ເຂົາຕ້ອງເຂົ້າມາພ້ອມກັບງົວຫນຸ່ມຫນຶ່ງໂຕທີ່ໃຊ້ເປັນເຄື່ອງບູຊາລົບລ້າງບາບ, ແລະແກະຫນຶ່ງໂຕທີ່ໃຊ້ເປັນເຄື່ອງເຜົາບູຊາ.
[4]ເຂົາຕ້ອງໃສ່ຊຸດຜ້າປ່ານບໍຣິສຸດ, ແລະເຂົາຕ້ອງໃສ່ຜ້າປ່ານໃນນັ້ນ,
ແລະເຂົາຕ້ອງມັດແອວດ້ວຍຜ້າປ່ານແລະໃສ່ຜ້າດ້ວຍຜ້າປ່ານນີ້ແມ່ນຊຸດທີ່ບໍຣິສຸດ, ເຂົາຕ້ອງອາບນ້ຳແລ້ວໃສ່ຊຸດນີ້.
[5]ເຂົາຕ້ອງເອົາແກະຜູ້ສອງໂຕຈາກຊຸມນຸມຊົນອິດສະຣາເອນໄປເປັນເຄື່ອງບູຊາລົບລ້າງບາບ. ແລະແກະໂຕຜູ້ຫນຶ່ງໂຕເປັນເຄື່ອງເຜົາບູຊາ.
[6]ແລ້ວອາໂຣນຕ້ອງຖວາຍງົວເປັນເຄື່ອງບູຊາລົບລ້າງບາບຂອງໂຕເອງ, ເພື່ອເຮັດການລົບລ້າງມົນທິນຂອງໂຕເອງ, ແລະຄອບຄົວຂອງເຂົາ.
[7]ແລ້ວເຂົາຕ້ອງເອົາແບ້ສອງໂຕນັ້ນໄປຖວາຍຕໍ່ພຣະພັກພຣະຢາເວບ່ອນທາງເຂົ້າເຕັນນັດພົບ.
[8]ແລ້ວອາໂຣນຕ້ອງຈັບສະຫລາກແບ້ສອງໂຕນັ້ນ, ສະຫລາກຫນຶ່ງຕົກເປັນຂອງພຣະຢາເວ. ແລະສະຫລາກຫນຶ່ງເພື່ອເປັນຂອງແບ້ຮັບບາບ.
[9]ແລ້ວອາໂຣນຕ້ອງຖວາຍແບ້ໂຕທີ່ສະຫລາກຕົກເປັນຂອງພຣະຢາເວ. ແລະຖວາຍແບ້ນັ້ນໃຫ້ເປັນເຄື່ອງບູຊາລົບລ້າງບາບ.
[10]ແຕ່ແບ້ໂຕທີ່ສະຫລາກຕົກເປັນແບ້ຮັບບາບຈະຕ້ອງນຳມາຕໍ່ພຣະພັກພຣະຢາເວແບບທີ່ຍັງມີຊີວິດຢູ່,
ເພື່ອເຮັດການລົບລ້າງມົນທິນບາບໂດຍການປ່ອຍແບ້ທີ່ເປັນແບ້ຮັບບາບນັ້ນເຂົ້າສູ່ຖິ່ນທຸລະກັນດານ.
[11]ແລ້ວອາໂຣນຕ້ອງຖວາຍງົວເປັນເຄື່ອງບູຊາລົບລ້າງບາບຂອງໂຕເອງ, ເຂົາຕ້ອງເຮັດການລົບມົນທິນບາບຂອງໂຕເອງ,
ແລະຂອງຄອບຄົວຂອງເຂົາ, ດັ່ງນັ້ນເຂົາຕ້ອງຂ້າງົວໃຫ້ເປັນເຄື່ອງບູຊາລົບລ້າງບາບຂອງໂຕເອງ.
[12]ອາໂຣນຕ້ອງນຳຫມໍ້ຂາງທີ່ເຕັມໄປດ້ວຍຖ່ານໄຟທີ່ເອົາອອກມາຈາກແທ່ນບູຊາຕໍ່ພຣະພັກພຣະຢາເວ.
ພ້ອມກັບກຳຍານທີ່ບົດລະອຽດຢ່າງດີຫນຶ່ງກຳມື, ແລະ ນຳສິ່ງເຫລົ່ານີ້ເຂົ້າໄປສະຖານທີ່ສັກສິດທີ່ສຸດ.
[13]ພາຍໃນນັ້ນເພິ່ນຈະກຳກຳຍານໂຮຍໃສ່ໄຟຕໍ່ພຣະພັກພຣະຢາເວ
ເພື່ອໃຫ້ຄວັນຈາກເຄື່ອງຫອມປົກຄຸມເຫນືອຝາຫີບແຫ່ງການລົບລ້າງມົນທິນບາບທີ່ປິດຢູ່ເທິງຫີບພັນທະສັນຍາ.
ເຂົາຕ້ອງເຮັດແນວນີ້ເພື່ອເຂົາຈະບໍ່ຕາຍ.
[14]ແລ້ວເຂົາຕ້ອງເອົາເລືອດງົວໄປຊິດໃສ່ຝາແຫ່ງການລົບລ້າງມົນທິນບາບ. ດ້ວຍນິ້ວຂອງເຂົາເຈັດຄັ້ງຕໍ່ຫນ້າຫີບແຫ່ງການລົບລ້າງມົນທິນ.
[15]ແລ້ວເຂົາຕ້ອງຂ້າແບ້ໂຕທີ່ເປັນເຄື່ອງບູຊາລົບລ້າງບາບສຳລັບປະຊາຊົນ, ແລ້ວເອົາເລືອດຂອງແບ້ນັ້ນເຂົ້າໄປໃນສະຖານທີ່ສັກສິດ.
ທີ່ນັ້ນເຂົາຕ້ອງເຮັດກັບເລືອດແບ້ເຊັ່ນດຽວກັນກັບທີ່ເຂົາເຄີຍເຮັດກັບເລືອດງົວຄືເຂົາຕ້ອງເອົາເລືອດນັ້ນເທິງຝາຫີບແຫ່ງການລົບລ້າງມົນທິນບາບ.
[16]ເຂົາຕ້ອງເຮັດການລົບລ້າງມົນທິນຂອງສະຖານທີ່ບໍລິສຸດອັນເນື່ອງມາຈາກການເຮັດໃຫ້ເປັນມົນທິນຂອງປະຊາຊົນອິດສະຣາເອນ,
ແລະເພາະການກະບົດຂອງພວກເຂົາ, ແລະ ຄວາມບາບທັງຫມົດຂອງພວກເຂົາ, ເຂົາຕ້ອງເຮັດເຊັ່ນນີ້ສຳລັບເຕັນນັດພົບ,
ດ້ວຍຊຶ່ງເປັນທີ່ພຣະຢາເວໄດ້ສະຖິດຢູ່ທ່າມກາງການກະທຳທີ່ເປັນມົນທິນຂອງພວກເຂົາ.
[17]ຫ້າມຄົນໃດຢູ່ໃນເຕັນນັດພົບເມື່ອອາໂຣນເຂົ້າໄປຫາການລົບລ້າງມົນທິນທີ່ສັກສິດທີ່ສຸດ, ຈົນກວ່າເຂົາຈະອອກມາ ແລະ
ໄດ້ເຮັດການລົບລ້າງມົນທິນຂອງໂຕເຂົາ ແລະຂອງຄອບຄົວຂອງເຂົາ, ແລະ ຂອງຊຸມນຸມຊົນອິດສະຣາເອນທັງຫມົດຈົນຫມົດສິ້ນແລ້ວ.
[18]ເຂົາຕ້ອງອອກໄປຍັງແທ່ນບູຊາທີ່ຢູ່ຕໍ່ພຣະພັກພຣະຢາເວ, ແລະການລົບລ້າງມົນທິນຂອງແທ່ນນັ້ນ, ແລະ ເຂົາຕ້ອງເອົາເລືອດງົວ, ແລະ
ເລືອດແບ້ບາງສ່ວນ ໄປເຈີມແຈຂອງແທ່ນບູຊາ.[19]ແລ້ວໃຊ້ນິ້ວມືຊິດເລືອດບາງສ່ວນເຈັດເທື່ອໃສ່ເທິງແທ່ນບູຊາ, ແລະ
ແຍກໄວ້ສະເພາະພຣະຢາເວ, ໃຫ້ພົ້ນຈາກການກະທຳທີ່ເປັນມົນທິນຂອງປະຊາຊົນອິດສະຣາເອນ.
[20]ເມື່ອເຂົາໄດ້ເຮັດການລົບລ້າງມົນທິນຂອງສະຖານທີ່ບໍລິສຸດ, ເຕັນນັດພົບ, ແລະແທ່ນບູຊາສຳເລັດແລ້ວ, ເຂົາຕ້ອງຖວາຍແບ້ໂຕທີ່ຍັງມີຊີວິດ.
[21]ອາໂຣນຕ້ອງວາງມືເທິງຫົວຂອງແບ້ທີ່ຍັງມີຊີວິດ ແລະສະພາບຄວາມຊົ່ວຮ້າຍທັງຫມົດຂອງປະຊາຊົນອິດສະຣາເອນ,
ການກະບົດທັງສິ້ນຂອງພວກເຂົາ, ແລະ ຄວາມບາບທັງຫມົດຂອງພວກເຂົາໄວ້ເທິງແບ້ນັ້ນ,
ແລ້ວເຂົາຕ້ອງວາງຄວາມບາບຊົ່ວນັ້ນໄວ້ເທິງຫົວຂອງແບ້ໂຕນັ້ນ,
ແລ້ວມອບແບ້ນັ້ນໄວ້ກັບແບ້ທີ່ຄົນພ້ອມຈະເອົາແບ້ນັ້ນໄປປ່ອຍໃນຖິ່ນທຸລະກັນດານ.
[22]ແບ້ນັ້ນຈະແບກຄວາມຊົ່ວຮ້າຍຂອງປະຊາຊົນທັງຫມົດໄປຍັງທີ່ລັບລີ້ ແລະເຂົາຕ້ອງປ່ອຍແບ້ໃຫ້ມັນເຂົ້າໄປຖິ່ນທຸລະກັນດານ.
[23]ແລ້ວອາໂຣນຕ້ອງກັບໄປຍັງເຕັນນັດພົບ, ແລະຖອດຊຸດຜ້າປ່ານທີ່ເຂົາໄດ້ໃສ່ກ່ອນເຂົ້າໄປໃນສະຖານທີ່ບໍລິສຸດອອກ,
ແລະເຂົາຕ້ອງເກັບຊຸດໄວ້ທີ່ນັ້ນ.[24]ເຂົາຕ້ອງອາບນ້ຳໃນສະຖານທີ່ບໍລິສຸດ, ແລະໃສ່ຊຸດປົກກະຕິຂອງເຂົາ,
ແລ້ວເຂົາຕ້ອງອອກໄປຖວາຍເຄື່ອງບູຊາຂອງຕົນເອງ, ແລະເຄື່ອງບູຊາຂອງປະຊາຊົນ,
ແລະນີ້ເປັນການລົບລ້າງມົນທິນບາບຂອງຕົນແລະຂອງປະຊາຊົນ.
[25]ເຂົາຕ້ອງເຜົາໄຂມັນຂອງເຄື່ອງບູຊາລົບລ້າງບາບເທິງແທ່ນບູຊາ.[26]ຊາຍທີ່ນຳແບ້ຮັບບາບໄປປ່ອຍຕ້ອງຊັກເສື້ອຜ້າຂອງຕົນແລະອາບນ້ຳ
ຫລັງຈາກນັ້ນແລ້ວເຂົາຈຶ່ງກັບເຂົ້າມາໃນຄ້າຍໄດ້.
[27]ໂຕງົວທີ່ໃຊ້ເປັນເຄື່ອງບູຊາລົບລ້າງບາບແລະແບ້ທີ່ໃຊ້ເປັນເຄື່ອງບູຊາລົບລ້າງບາບ,
ທີ່ໄດ້ນຳເລືອດຂອງມັນໄປເຮັດການລົບລ້າງມົນທິນໃນສະຖານທີ່ບໍລິສຸດ, ຈະຕ້ອງຖືກນຳອອກໄປພາຍນອກຄ້າຍແລະຕ້ອງເຜົາຫນັງ, ຊີ້ນ,
ແລະຂີ້ຂອງມັນທີ່ນັ້ນ.[28]ຊາຍທີ່ເຜົາສ່ວນເຫລົ່ານັ້ນຕ້ອງຊັກເສື້ອຜ້າຂອງຕົນເອງແລະອາບນ້ຳ, ຫລັງຈາກນັ້ນເຂົາຈຶ່ງກັບເຂົ້າມາໃນຄ້າຍໄດ້.
[29]ນີ້ເປັນກົດເກນຖາວອນສຳລັບພວກເຈົ້າວ່າໃນເດືອນທີເຈັດ, ໃນວັນທີສິບຂອງເດືອນນັ້ນພວກເຈົ້າຕ້ອງຖ່ອມໂຕລົງ, ແລະ ບໍ່ເຮັດວຽກງານໃດໆ,
ບໍ່ວ່າຈະເປັນຊາວເມືອງເອງ ຫລືຄົນຕ່າງຊາດທີ່ອາໄສຢູ່ທ່າມກາງພວກເຈົ້າ.
[30]ນີ້ເປັນເພາະວ່າໃນວັນແຫ່ງການລົບລ້າງມົນທິນບາບຈະເປັນວັນທີ່ຕັ້ງຂຶ້ນເພື່ອພວກເຈົ້າ, ເພື່ອພວກເຈົ້າຈະສະອາດຕໍ່ພຣະພັກພຣະຢາເວ.


generated on Tue Jun 17 19:01:42 2025

[31]ນີ້ເປັນວັນສະບາໂຕແຫ່ງການຢຸດພັກທີ່ແທ້ຈິງຂອງພວກເຈົ້າ, ແລະ ພວກເຈົ້າເອງຕ້ອງຖ່ອມໂຕລົງ ແລະບໍ່ເຮັດວຽກໃດໆ,
ນີ້ຈະເປັນກົດເກນຖາວອນໃນທ່າມກາງພວກເຈົ້າ.
[32]ມະຫາປະໂຣຫິດຜູ້ທີ່ຈະຮັບການເຈີມ ແລະຮັບການແຕ່ງຕັ້ງໃຫ້ເປັນມະຫາປະໂຣຫິດແທນບິດາຂອງຕົນ, ເຂົາຕ້ອງເຮັດການລົບລ້າງມົນທິນນີ້,
ແລະໃສ່ຊຸດຜ້າປ່ານ, ຊຶ່ງເປັນຊຸດທີ່ບໍລິສຸດ[33]ເຂົາຕ້ອງເຮັດການລົບມົນທິນຂອງສະຖານທີ່ບໍລິສຸດ, ເຂົາຕ້ອງລົບມົນທິນຂອງເຕັນນັດພົບ.
ແລະຂອງແທ່ນບູຊາ, ເຂົາຕ້ອງເຮັດການລົບມົນທິນຂອງປະໂຣຫິດ, ແລະປະຊາຊົນທັງຫມົດຂອງຊຸມນຸມຊົນ.
[34]ນີ້ເປັນກົດເກນຖາວອນສຳລັບພວກເຈົ້າ,
ເພື່ອເຮັດການລົບລ້າງມົນທິນບາບຂອງປະຊາຊົນອິດສະຣາເອນອັນເນື່ອງມາຈາກຄວາມບາບທັງຫມົດຂອງພວກເຂົາປີລະຄັ້ງຂອງທຸກປີ."
ໂມເຊກໍເຮັດຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້.


generated on Tue Jun 17 19:01:42 2025

# 17

[1]ພຣະຢາເວກ່າວແກ່ໂມເຊວ່າ, [2]"ຈົ່ງບອກແກ່ອາໂຣນ ແລະ ລູກຊາຍທັງຫລາຍຂອງເຂົາ, ແລະ ບອກປະຊາຊົນອິດສະຣາເອນທັງຫມົດ,
ບອກພວກເຂົາເຖິງສິ່ງທີ່ພຣະຢາເວໄດ້ຊົງບັນຊາໄວ້ວ່າ, [3]ຊາຍຄົນໃດຈາກອິດສະຣາເອນຂ້າງົວ, ລູກແກະ ຫລືແບ້ພາຍໃນຄ້າຍ
ຫລືຜູ້ທີ່ຂ້າພາຍນອກຄ້າຍ, ເພື່ອຈະຖວາຍເປັນເຄື່ອງບູຊາ.
[4]ຖ້າເຂົາບໍ່ໄດ້ນຳເຄື່ອງບູຊານັ້ນມາທາງເຂົ້າເຕັນນັດພົບເພື່ອຖວາຍເປັນເຄື່ອງບູຊາແດ່ພຣະຢາເວຕໍ່ຫນ້າສະຖານທີ່ບໍລິສຸດນັ້ນ,
ຊາຍຄົນນັ້ນກໍມີຄວາມຜິດໃນການເຮັດໃຫ້ເລືອດໄຫລ, ເຂົາໄດ້ເຮັດໃຫ້ເລືອດໄຫລ
ແລະຊາຍຄົນນັ້ນຕ້ອງຖືກຕັດອອກຈາກທ່າມກາງຜູ້ຄົນຂອງເຂົາ.

[5]ຈຸດປະສົງຂອງພຣະບັນຊານີ້ກໍເພື່ອໃຫ້ປະຊາຊົນອິດສະຣາເອນ ຈະນຳເຄື່ອງບູຊາຂອງພວກເຂົາມາຖວາຍແດ່ພຣະຢາເວ
ທີ່ທາງເຂົ້າເຕັນນັດພົບ, ນຳມາມອບໃຫ້ປະໂຣຫິດເພື່ອເພື່ອຖວາຍເປັນເຄື່ອງສັນຕິບູຊາແດ່ພຣະຢາເວ.
ແທນທີ່ການຖວາຍເຄື່ອງບູຊາຕາມເດີນພາຍນອກ. [6]ປະໂຣຫິດຈະຊິດເລືອດນັ້ນໃສ່ແທ່ນບູຊາຂອງພຣະຢາເວຢູ່ທີ່ທາງເຂົ້າຂອງເຕັນນັດພົບ;
ປະໂຣຫິດຈະເຜົາໄຂມັນເພື່ອໃຫ້ເກີດເປັນກິ່ນຫອມແດ່ພຣະຢາເວ.
[7]ປະຊາຊົນຕ້ອງບໍ່ຖວາຍເຄື່ອງບູຊາຂອງພວກເຂົາ, ໃຫ້ແກ່ຮູບປັ້ນແບ້ອີກຕໍ່ໄປ, ເພາະວ່ານີ້ເປັນການກະທຳທີ່ຫນ້າລັງກຽດ.
ນີ້ຈະເປັນກົດເກນຖາວອນສຳລັບພວກເຂົາໄປຕະຫລອດຊົ່ວອາຍຸຂອງພວກເຂົາ.'
[8]ເຈົ້າຕ້ອງບອກແກ່ພວກເຂົາວ່າ, 'ຊາຍອິດສະຣາເອນຄົນໃດ, ຫລືຄົນຕ່າງຊາດຄົນໃດຜູ້ອາໄສຢູ່ທ່າມກາງພວກເຂົາ,
ຜູ້ຖວາຍເຄື່ອງເຜົາບູຊາຫລືເຄື່ອງບູຊາ. [9]ແລະບໍ່ໄດ້ນຳເຄື່ອງບູຊາມາທີ່ທາງເຂົ້າຂອງເຕັນນັດພົບເພື່ອຖວາຍເຄື່ອງບູຊາແດ່ພຣະຢາເວ.
ຊາຍຄົນນັ້ນຕ້ອງຖືກຕັດອອກຈາກຊົນຊາດຂອງເຂົາ.
[10]ຖ້າຄົນໃດໃນພົງພັນອິດສະຣາເອນ, ຫລືຄົນຕ່າງຊາດຜູ້ອາໄສຢູ່ທ່າມກາງພວກເຂົາຫ້າມກິນເລືອດໃດໆ,
ເຮົາຈະຕັ້ງຫນ້າຂອງເຮົາຕໍ່ສູ້ກັບຄົນນັ້ນທີ່ກິນເລືອດ, ແລະເຮົາຈະຕັດເຂົາອອກຈາກທ່າມກາງຊົນຊາດຂອງເຂົາ.
[11]ເພາະວ່າຊີວິດສັດໂຕຫນຶ່ງກໍຄືເລືອດຂອງມັນ,
ເຮົາໄດ້ໃຫ້ເລືອດຂອງມັນແກ່ພວກເຈົ້າເພື່ອໃຊ້ເຮັດການລົບລ້າງມົນທິນເທິງແທ່ນບູຊາສຳຫລັບຊີວິດຂອງພວກເຈົ້າ,
ເພາະວ່າເລືອດນັ້ນເອງທີ່ເຮັດການລົບລ້າງມົນທິນໄດ້ເພາະເລືອດນັ້ນເອງທີ່ລົບລ້າງມົນທິນໃຫ້ແກ່ຊີວິດ.
[12]ເຫດນັ້ນເຮົາບອກປະຊາຊົນອິດສະຣາເອນວ່າ, ຫ້າມຄົນໃດໃນທ່າມກາງພວກເຈົ້າກິນເລືອດ,
ແມ້ແຕ່ຄົນຕ່າງຊາດທີ່ຢູ່ທ່າມກາງພວກເຈົ້າກໍຫ້າມກິນເລືອດ. [13]ຫາກມີຄົນອິດສະຣາເອນຄົນໃດ
ຫລືຄົນຕ່າງຊາດຄົນໃດອາໄສຢູ່ທ່າມກາງພວກເຈົ້າ, ຜູ້ອອກໄປລ່າສັດແລະຂ້າສັດຫລືນົກທີ່ສາມາດກິນໄດ້,
ຄົນນັ້ນຕ້ອງຖອກເລືອດຂອງສັດຖິ້ມແລະເອົາດິນຖົມ.
[14]ເພາະຊີວິດສັດແຕ່ລະໂຕຄືເລືອດຂອງມັນ, ດ້ວຍເຫດນີ້ເຮົາໄດ້ບອກແກ່ປະຊາຊົນອິດສະຣາເອນວ່າ, "ເຈົ້າຈົ່ງຢ່າກິນເລືອດໃດໆ,
ເພາະສັດທີ່ມີຊີວິດທຸກໂຕຄືເລືອດຂອງມັນໃຜກໍຕາມທີ່ກິນເລືອດຕ້ອງຖືກຕັດອອກ."
[15]ທຸກຄົນທີ່ກິນສັດທີ່ຕາຍແລ້ວຫລືຖືກສັດປ່າກັດຕາຍ,
ບໍ່ວ່າຄົນນັ້ນຈະເປັນຊາວເມືອງແຕ່ກຳເນີດຫລືເປັນຄົນຕ່າງຊາດທີ່ອາໄສຢູ່ທ່າມກາງພວກເຈົ້າ,
ເຂົາຕ້ອງຊັກເສື້ອຜ້າຂອງເຂົາແລະອາບນ້ຳແລະເຂົາຈະເປັນມົນທິນໄປຈົນເຖິງຕອນແລງ, ແລ້ວເຂົາຈະສະອາດ.
[16]ແຕ່ຖ້າເຂົາຊັກເສື້ອຜ້າຂອງເຂົາຫລືອາບນ້ຳ ເຂົາກໍຕ້ອງແບກຮັບຄວາມຜິດຂອງເຂົາ."'


generated on Tue Jun 17 19:01:42 2025

# 18

1ພຣະຢາເວໄດ້ກ່າວແກ່ໂມເຊວ່າ, 2"ຈົ່ງກ່າວແກ່ຄົນອິດສະຣາເອນ ແລະ ບອກພວກເຂົາວ່າ,
'ເຮົາຄືພຣະຢາເວພຣະເຈົ້າຂອງເຈົ້າທັງຫລາຍ. 3ເຈົ້າທັງຫລາຍຕ້ອງບໍ່ເຮັດຕາມສິ່ງຕ່າງໆ ທີ່ປະຊາຊົນເຮັດຄືໃນເອຢິບ
ຊຶ່ງທີ່ພວກເຈົ້າເຄີຍຢູ່ອາໃສມາກ່ອນ. ເຈົ້າທັງຫລາຍຕ້ອງບໍ່ເຮັດສິ່ງຕ່າງໆ ທີ່ປະຊາຊົນເຮັດຄືໃນການາອານ,
ຊຶ່ງແຜ່ນດິນທີ່ເຮົາກຳລັງພາເຈົ້າທັງຫລາຍໄປ. ຈົ່ງຢ່າເຮັດຕາມປະເພນີຂອງເຂົາ.

4ເຈົ້າທັງຫລາຍຕ້ອງເຮັດຕາມກົດຫມາຍຂອງເຮົາ, ແລະເຈົ້າທັງຫລາຍຕ້ອງຮັກສາຄຳບັນຊາຂອງເຮົາ, ເພື່ອເຈົ້າຈະໄດ້ດຳເນີນຕາມນັ້ນ,
ເພາະເຮົາຄືພຣະຢາເວພຣະເຈົ້າຂອງເຈົ້າທັງຫລາຍ. 5ເຫດສະນັ້ນເຈົ້າທັງຫລາຍຕ້ອງຮັກສາກົດເກນຂອງເຮົາ. ແລະກົດຫມາຍຂອງເຮົາ
ຖ້າໃຜເຮັດຕາມນັ້ນ, ເຂົາຈະມີຊີວິດຢູ່ກົດເກນເຫລົ່ານັ້ນເຮົາຄືພຣະຢາເວ.
6ຈົ່ງຢ່າໃຫ້ຄົນໃດຫລັບນອນກັບໃຜກໍຕາມທີ່ກ່ຽວຂ້ອງກັນຄືພີ່ນ້ອງ. ເຮົາຄືພຣະຢາເວ.
7ຈົ່ງຢ່າລົບລູ່ກຽດບິດາຂອງເຈົ້າໂດຍການຫລັບນອນກັບມານດາຂອງເຈົ້າ. ນາງເປັນແມ່ຂອງເຈົ້າ! ເຈົ້າຕ້ອງບໍ່ຕ້ອງລົບລູ່ກຽດນາງ.
8ຢ່າຫລັບນອນກັບບັນດາເມຍຂອງບິດາເຈົ້າ, ເຈົ້າຕ້ອງບໍ່ຫລົບລູ່ກຽດຂອງບິດາເຈົ້າແບບນັ້ນ.
9ຈົ່ງຢ່າຫລັບນອນກັບເອື້ອຍຫລືນ້ອງສາວຄົນໃດຂອງເຈົ້າ, ບໍ່ວ່ານາງເປັນລູກສາວຂອງບິດາເຈົ້າຫລືເປັນລູກສາວຂອງແມ່ເຈົ້າ,
ບໍ່ວ່ານາງຖືກລ້ຽງມາໃນບ້ານຂອງເຈົ້າຫລືທີ່ຫ່າງໄກຈາກເຈົ້າ. ເຈົ້າຕ້ອງບໍ່ຫລັບນອນກັບເອື້ອຍຫລືນ້ອງສາວຂອງເຈົ້າ.
10ຈົ່ງຢ່າຫລັບນອນກັບລູກສາວຂອງລູກຊາຍເຈົ້າ ຫລືລູກສາວຂອງລູກຜູ້ຍິງຂອງເຈົ້າ. ນັ້ນຈະເປັນຄວາມອັບອາຍຂອງເຈົ້າເອງ.
11ຈົ່ງຢ່າຫລັບນອນກັບລູກສາວຂອງເມຍຂອງບິດາເຈົ້າ. ຜູ້ຊຶ່ງເກີດມາຈາກບິດາເຈົ້າ, ລາວເປັນນ້ອງສາວຂອງເຈົ້າ, ແລະ
ເຈົ້າຕ້ອງບໍ່ຫລັບນອນກັບນາງ.
12ຈົ່ງຢ່າຫລັບນອນກັບປ້າຫລືອາຂອງເຈົ້າ. ນາງເປັນພີ່ນ້ອງໃກ້ຊິດກັບພໍ່ເຈົ້າ. 13ຈົ່ງຢ່າຫລັບນອນກັບປ້າຫລືນ້າຍິງຂອງເຈົ້າ
ນາງເປັນພີ່ນ້ອງໄກ້ຊິດກັບແມ່ຂອງເຈົ້າ. 14ຈົ່ງຢ່າລົບລູ່ກຽດລຸງຫລືອາຂອງເຈົ້າໂດຍການຫລັບນອນກັບເມຍຂອງເຂົາ.
ຈົ່ງຢ່າເຂົ້າໃກ້ນາງເພາະຫວັງເຊັ່ນນັ້ນ, ນາງເປັນປ້າສະໄພ້ຫລືອາສະໄພ້ຂອງເຈົ້າ.
15ຈົ່ງຢ່າຫລັບນອນກັບລູກໄພ້ຂອງເຈົ້າ. ນາງເປັນເມຍຂອງລູກຊາຍເຈົ້າ, ຈົ່ງຢ່າຫລັບນອນກັບນາງ.
16ຈົ່ງຢ່າຫລັບນອນກັບເມຍຂອງອ້າຍຫລືນ້ອງຊາຍຂອງເຈົ້າ. ຈົ່ງຢ່າລົບລູ່ກຽດເຂົາດ້ວຍວິທີນີ້.
17ຈົ່ງຢ່າຫລັບນອນກັບຜູ້ຍິງແລະລູກສາວຂອງນາງ, ຫລືລູກສາວຂອງລູກຊາຍນາງ. ຫລືລູກສາວລູກຜູ້ຍິງຂອງນາງ,
ພວກເຂົາຕ່າງເປັນຍາດໃກ້ຊິດກັບນາງ, ແລະ ການຫລັບນອນກັບເຂົາເປັນສິ່ງທີ່ຊົ່ວຮ້າຍ.
18ເຈົ້າຕ້ອງບໍ່ແຕ່ງງານກັບເອື້ອຍຫລືນ້ອງສາວຂອງເມຍເຈົ້າເພື່ອໃຫ້ເປັນເມຍຄົນທີສອງ, ແລະ
ຫລັບນອນກັບນາງໃນຂະນະທີ່ເມຍຄົນທຳອິດຂອງເຈົ້າຍັງມີຊີວິດຢູ່.
19ຈົ່ງຢ່າຫລັບນອນກັບຜູ້ຍິງໃນຊ່ວງນາງມີປະຈຳເດືອນ, ນາງເປັນມົນທິນໃນຊ່ວງເວລານັ້ນ. 20ຈົ່ງຢ່າຫລັບນອນກັບເມຍຂອງເພື່ອນບ້ານເຈົ້າ,
ແລະເຮັດໂຕເຈົ້າເອງໃຫ້ເປັນມົນທິນກັບນາງແບບນັ້ນ.
21ເຈົ້າຕ້ອງບໍ່ຍົກລູກທັງຫລາຍຂອງເຈົ້າເພື່ອໃຫ້ພວກເຂົາລຸຍໄຟ, ເພື່ອເຈົ້າຈະຖວາຍພວກເຂົາໃຫ້ແກ່ພະໂມເລັກ,
ເພາະມັນນຳຄວາມເຊື່ອມເສຍມາໃຫ້ນາມຊື່ຂອງພຣະເຈົ້າຂອງເຈົ້າ. ເຮົາຄືພຣະຢາເວ.
22ຈົ່ງຢ່າຫລັບນອນກັບຜູ້ຊາຍອື່ນໆ ເຫມືອນກັບນອນກັບຜູ້ຍິງ. ນີ້ເປັນສິ່ງທີ່ຊົ່ວຮ້າຍ. 23ຈົ່ງຢ່າຫລັບນອນກັບສັດໃດໆ ແລະ
ເຮັດໂຕເຈົ້າເອງໃຫ້ເປັນມົນທິນເພາະມັນ. ຫ້າມບໍ່ໃຫ້ຜູ້ຍິງຄິດນອນກັບສັດໃດໆ. ເພາະການເຮັດບ້າເຊັ່ນນີ້
ພາໃຫ້ພວກເຈົ້າເປັນມົນທິນຕາມກົດບັນຍັດ.
24ຈົ່ງຢ່າເຮັດໃຫ້ເຈົ້າເອງເປັນມົນທິນດ້ວຍວິທີການເຫລົ່ານີ້ເລີຍ, ເພາະຊົນຊາດທັງຫລາຍຄືຊົນຊາດຕ່າງໆ,
ທີ່ເຮົາໄດ້ຂັບໄລ່ອອກໄປຕໍ່ຫນ້າເຈົ້າທັງຫລາຍຕ່າງກໍເປັນມົນທິນດ້ວຍວິທີການເຫລົ່ານີ້ທັງຫມົດ.
25ແຜ່ນດິນຕ້ອງກາຍເປັນມົນທິນດັ່ງນັ້ນເຮົາຈຶ່ງໄດ້ລົງໂທດຄວາມບາບຂອງພວກເຂົາ, ແລະແຜ່ນດິນ
ໂດຍເຮັດໃຫ້ເປັນສັ່ງນຫນາມຕໍ່ຄົນທີ່ຢູ່ອາໄສ.
26ເຫດສະນັ້ນເຈົ້າທັງຫລາຍຕ້ອງຮັກສາຄຳບັນຊາແລະກົດເກນຂອງເຮົາ, ແລະຕ້ອງບໍ່ເຮັດຫຍັງທີ່ເປັນສິ່ງຫນ້າລັງກຽດເຫລົ່ານີ້,
ບໍ່ວ່າເຈົ້າທັງຫລາຍຊຶ່ງເປັນຊາວເມືອງອິດສະຣາເອນມາຕັ້ງແຕ່ເກີດຫລືຄົນຕ່າງຊາດທີ່ອາໄສຢູ່ທ່າມກາງພວກເຈົ້າ.
27ເພາະນີ້ຄືສິ່ງຊົ່ວຮ້າຍທີ່ຜູ້ຄົນໃນແຜ່ນດິນຄືບັນດາຄົນທີ່ເຄີຍຢູ່ອາໄສໃນທີ່ນີ້ກ່ອນພວກເຈົ້າໄດເຮັດກັນ, ແລະບັດນີ້ແຜ່ນດິນນັ້ນກໍເປັນມົນທິນ.
28ເຫດສະນັ້ນຈົ່ງລະວັງເພື່ອແຜ່ນດິນນັ້ນຈະບໍ່ເປັນມົນທິນ,
ເຫມືອນດັ່ງທີ່ມັນເຄີຍເປັນມົນທິນຈາກຜູ້ຄົນທີ່ເຄີຍຢູ່ອາໄສມາກ່ອນພວກເຈົ້າອອກມາແລ້ວ.
29ໃຜກໍຕາມທີ່ເຮັດສິ່ງທີ່ຫນ້າລັງກຽດເຫລົ່ານັ້ນ, ຄົນນັ້ນທີ່ເຮັດແບບນັ້ນຈະຖືກຕັດອອກຈາກທ່າມກາງຊົນຊາດຂອງເຂົາ. 30ເຫດສະນັ້ນ
ພວກເຈົ້າຕ້ອງຮັກສາຄຳບັນຊາຂອງເຮົາໂດຍບໍ່ເຮັດຕາມປະເພນີທີ່ຫນ້າລັງກຽດເຫລົ່ານີ້ຊຶ່ງເຄີຍຖືປະຕິບັດກັນໃນແຜ່ນດິນນີ້ ກ່ອນພວກເຈົ້າ,
ດັ່ງນັ້ນເຈົ້າທັງຫລາຍຈົ່ງຢ່າເຮັດໃຫ້ໂຕຂອງເຈົ້າເອງເປັນມົນທິນເພາະສິ່ງເຫລົ່ານີ້. ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ.


generated on Tue Jun 17 19:01:42 2025

19 [1]ພຣະຢາເວກ່າວແກ່ໂມເຊວ່າ,[2]" ຈົ່ງກ່າວແກ່ທີ່ຊຸມນຸມຂອງປະຊາຊົນອິດສະຣາເອນທັງຫມົດ, ແລະບອກພວກເຂົາວ່າ,
'ພວກເຈົ້າຕ້ອງບໍລິສຸດ. ເພາະເຮົາຢາເວພຣະເຈົ້າຂອງພວກເຈົ້າເປັນຜູ້ບໍລິສຸດ.[3]ທຸກຄົນຈົ່ງເຄົາລົບແມ່ຂອງຕົນແລະພໍ່ຂອງຕົນ,
ແລະພວກເຈົ້າຕ້ອງຮັກສາໂຕຂອງເຮົາ, ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.[4]ຈົ່ງຢ່າຫັນໄປຫາຮູບເຄົາລົບອັນໄຮ້ຄ່າ,
ຫລືປັ້ນຮູບເຄົາລົບເພື່ອຕົນເອງ. ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.

[5]ເມື່ອພວກເຈົ້າຖວາຍເຄື່ອງສັນຕິບູຊາແດ່ພຣະຢາເວ, ພວກເຈົ້າຕ້ອງຖວາຍເຄື່ອງບູຊາທີ່ເຮັດໃຫ້ຕົວເຈົ້າເປັນທີ່ຍອມຮັບ.
[6]ເຄື່ອງບູຊານັ້ນຕ້ອງກິນໃນມື້ດຽວກັບທີ່ເຈົ້າຖວາຍ, ຫລືມື້ຕໍ່ໄປ. ຖ້າມີຫຍັງເຫລືອຈົນເຖິງມື້ທີສາມຈະຕ້ອງເຜົາ,
[7]ຖ້າໄດ້ກິນຫມົດແລ້ວໃນມື້ທີສາມນັ້ນ, ມັນເປັນມົນທິນ. ຕ້ອງບໍ່ເປັນທີ່ຍອມຮັບ.[8]ແຕ່ທຸກຄົນທີ່ກິນກໍຕ້ອງແບກຮັບຄວາມຜິດຂອງຕົນເອງ,
ເພາະເຂົາລົບລູ່ສິ່ງທີ່ບໍລິສຸດແດ່ພຣະຢາເວ. ຄົນນັ້ນຕ້ອງຖືກຕັດອອກຈາກຊົນຊາດຂອງເຂົາ.
[9]ເມື່ອພວກເຈົ້າເກັບກ່ຽວຈາກແຜ່ນດິນຂອງພວກເຈົ້າ, ພວກເຈົ້າຕ້ອງບໍ່ເກັບກ່ຽວຕາມມຸມຂອງທົ່ງນາຂອງພວກເຈົ້າຈົນກ້ຽງ.
ແລະຈະບໍ່ເກັບກ່ຽວຜົນຜະລິດໄປຈົນຫມົດ.[10]ພວກເຈົ້າຕ້ອງບໍ່ເກັບພວງອາງຸ່ນທຸກເມັດຈາກສວນອະງຸ່ນຂອງພວກເຈົ້າ.
ຫລືເກັບພວງອະງຸ່ນທີ່ເຮ່ຍເທິງພື້ນໃນສວນອະງຸ່ນຂອງພວກເຈົ້າ, ພວກເຈົ້າຕ້ອງເຫລືອໄວ້ສຳລັບຄົນຕ່າງຊາດ.
ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.
[11]ຢ່າລັກ. ຢ່າຕົວະ. ຢ່າຫລອກລວງກັນແລະກັນ.
[12]ຢ່າສາບານໂດຍອ້າງນາມຂອງເຮົາແລະເຮັດໃຫ້ພຣະນາມຂອງພຣະເຈົ້າຂອງພວກເຈົ້າຖືກຢຽດຢາມ. ເຮົາຄືຢາເວ.
[13]ຢ່າກົດຂີ່ເພື່ອນບ້ານຂອງພວກເຈົ້າຫລືປຸ້ນເຂົາ. ຕ້ອງບໍ່ຄ້າງຄ່າແຮງຂອງຄົນລູກຈ້າງຂ້າມຄືນຈົນເຖິງຕອນເຊົ້າ.
[14]ຢ່າດ່າຄົນຫູຫນວກຫລືວາງສິ່ງສະດຸດຂວາງຄົນຕາບອດ. ແຕ່ຈົ່ງເກງກົວພຣະເຈົ້າຂອງພວກເຈົ້າແທນ. ເຮົາຄືຢາເວ.
[15]ຢ່າເຮັດໃຫ້ການຕັດສິນບໍ່ທ່ຽງທຳ. ພວກເຈົ້າຕ້ອງບໍ່ສະແດງຄວາມລຳອຽງຕໍ່ບາງຄົນເພາະເຫັນວ່າເຂົາຍາກຈົນ,
ແລະພວກເຈົ້າຕ້ອງບໍ່ສະແດງຄວາມລຳອຽງແກ່ບາງຄົນເພາະເຫັນວ່າເຂົາເປັນຄົນສຳຄັນ. ແຕ່ຈົ່ງຕັດສິນເພື່ອນບ້ານຂອງພວກເຈົ້າຢ່າງຍຸດຕິທຳ.
[16]ຢ່າຫຽວຢ່າງໄປທົ່ວເພື່ອນິນທາເລື່ອງບໍ່ທ່ຽງທຳໃຫ້ກະຈາຍໄປໃນທ່າມກາງປະຊາຊົນຂອງພວກເຈົ້າ.
ແຕ່ຈົ່ງຫາທາງທີ່ຈະປົກປ້ອງຊີວິດຂອງເພື່ອນບ້ານຂອງພວກເຈົ້າ. ເຮົາຄືຢາເວ.
[17]ພວກເຈົ້າຕ້ອງຕັກເຕືອນເພື່ອນບ້ານດ້ວຍຄວາມຈິງໃຈ. ເພື່ອຈະບໍ່ໄດ້ມີສ່ວນໃນຄວາມບາບເພາະເຂົາ.[18]ຢ່າແກ້ແຄ້ນ ຫລື
ຄິດປອງຮ້າຍຄົນໃນຊົນຊາດດຽວກັນ, ແຕ່ຈົ່ງຮັກເພື່ອນບ້ານຂອງພວກເຈົ້າເຫມືອນຮັກຕົນເອງ. ເຮົາຄືຢາເວ.
[19]ພວກເຈົ້າຕ້ອງຮັກສາຄຳບັນຊາຂອງເຮົາ. ຢ່າປະສົມພັນບັນດາສັດຂອງພວກເຈົ້າກັບສັດອື່ນທີ່ຕ່າງຊະນິດກັນ,
ຢ່າຫວ່ານເມັດສອງຊະນິດທີ່ແຕກຕ່າງກັນປະສົມກັນເມື່ອວ່ານໃນທົ່ງນາຂອງພວກເຈົ້າ. ຢ່າໃສ່ຊຸດທີ່ເຮັດມາຈາກຜ້າສອງຊະນິດປະສົມກັນ.
[20]ຜູ້ໃດທີ່ຫລັບນອນກັບທາດຍິງຊຶ່ງໄດ້ຫມັ້ນຫມາຍໄວ້ແລ້ວສຳລັບຜົວ, ແຕ່ຍັງບໍ່ໄດ້ຮັບການໄຖ່ຖອນ ຫລື ຍັງບໍ່ໄດ້ຮັບອິດສະລະຂອງນາງ,
ພວກເຂົາຕ້ອງຖືກເຮັດໃຫ້ຕາຍເພາະວ່ານາງຍັງບໍ່ໄດ້ຮັບອິດສະລະ.
[21]ຊາຍນັ້ນຕ້ອງນຳເຄື່ອງບູຊາໄຖ່ຄວາມຜິດຂອງຕົນມາຖວາຍແດ່ພຣະຢາເວບ່ອນທາງເຂົ້າເຕັນນັດພົບ.
ໂດຍນຳແກະຕົວຜູ້ມາເປັນເຄື່ອງບູຊາໄຖ່ຄວາມຜິດ.
[22]ແລ້ວປະໂຣຫິດຈະເຮັດການລົບມົນທິນໃຫ້ແກ່ເຂົາດ້ວຍແກະໂຕຜູ້ໃຫ້ເປັນເຄື່ອງບູຊາໄຖ່ຄວາມຜິດຕໍ່ຫນ້າພຣະຢາເວ.
ສຳລັບຄວາມບາບທີ່ເຂົາໄດ້ເຮັດລົງໄປ, ແລ້ວຄວາມບາບທີ່ເຂົາໄດ້ເຮັດລົງໄປກໍຈະໄດ້ຮັບການອະໄພ.
[23]ເມື່ອພວກເຈົ້າເຂົ້າມາໃນແຜ່ນດິນ ແລະໄດ້ປູກຕົ້ນໄມ້ຫລາຍຊະນິດໄວ້ເພື່ອເປັນອາຫານ,
ແລ້ວພວກເຈົ້າຕ້ອງຖືວ່າຜົນທີ່ອອກມານັ້ນເປັນສິ່ງທີ່ຫ້າມກິນ, ຫມາກໄມ້ນັ້ນເປັນທີ່ຕ້ອງຫ້າມສຳລັບພວກເຈົ້າເປັນເວລາສາມປີ, ຫ້າມກິນຜົນນັ້ນ.
[24]ແຕ່ໃນປີທີສີ່, ຜົນລະປູກທັງຫມົດຈະບໍລິສຸດ, ເປັນເຄື່ອງບູຊາເພື່ອຖວາຍສັນລະເສີນແດ່ພຣະຢາເວ.[25]ໃນປີທີຫ້າ,
ເຈົ້າທັງຫລາຍຈຶ່ງຈະກິນຜົນລະປູກນັ້ນໄດ້, ການທີ່ຄອຍຖ້າແບບນັ້ນກໍເພື່ອໃຫ້ຕົ້ນໄມ້ທັງຫລາຍໄດ້ອອກຜົນເພີ່ມຫລາຍຂຶ້ນ,
ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.
[26]ຢ່າກິນຊີ້ນທີ່ຍັງມີເລືອດຢູ່ຂ້າງໃນນັ້ນ, ຢ່າປຶກສາວິນຍານຕ່າງໆ ກ່ຽວກັບເລື່ອງອານາຄົດ,
ຢ່າຫາທາງຄວບຄຸມຄົນອື່ນໂດຍໃຊ້ອຳນາດເຫນືອທຳມະຊາດ.
[27]ຢ່າເຮັດຕາມນິໄສຂອງຄົນຕ່າງຊາດເຊັ່ນການໂກນດ້ານຂ້າງຫົວຫລືຕັດປາຍຫນວດຂອງພວກເຈົ້າ.
[28]ຢ່າເຊືອດຮ່າງກາຍຂອງພວກເຈົ້າເພື່ອໄວ້ທຸກແກ່ຄົນຕາຍ, ຫລືສັກເທິງຮ່າງກາຍຂອງພວກເຈົ້າ. ເຮົາຄືຢາເວ.
[29]ຢ່າເຮັດໃຫ້ລູກສາວຂອງພວກເຈົ້າຂາຍຫນ້າໂດຍການເຮັດໃຫ້ນາງເປັນໂສເພນີ,
ບໍ່ສະນັ້ນຊົນຊາດກໍຈະລົ້ມລົງຕໍ່ການຂາຍຕົວແລະແຜ່ນດິນຈະເຕັມໄປດ້ວຍຄວາມຊົ່ວຮ້າຍ.
[30]ພວກເຈົ້າຕ້ອງຮັກສາບັນດາວັນສະບາໂຕຂອງເຮົາແລະໃຫ້ກຽດແກ່ສະຖານນະມັດສະການແຫ່ງພັບພາຂອງເຮົາ. ເຮົາຄືຢາເວ.
[31]ຢ່າຫັນໄປຫາບັນດາຄົນທີ່ຕິດຕໍ່ເວົ້າກັບຄົນຕາຍຫລືວິນຍານຕ່າງໆ. ຢ່າທ່ຽວເສາະຫາພວກເຂົາ,
ບໍ່ສະນັ້ນພວກເຂົາຈະເຮັດໃຫ້ພວກເຈົ້າເປັນມົນທິນ. ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.
[32]ພວກເຈົ້າຕ້ອງຄຳນັບຕໍ່ຜູ້ທີ່ມີຜົມງອກແລ້ວແລະໃຫ້ກຽດຕໍ່ຫນ້າຜູ້ອາວຸໂສ. ພວກເຈົ້າຕ້ອງຢຳເກງພຣະເຈົ້າຂອງພວກເຈົ້າ. ເຮົາຄືຢາເວ.
[33]ຖ້າມີບັນດາຄົນຊາດທີ່ອາໃສຢູ່ທ່າມກາງພວກເຈົ້າໃນແຜ່ນດິນຂອງພວກເຈົ້າ, ພວກເຈົ້າຕ້ອງບໍ່ເຮັດຜິດຕໍ່ພວກເຂົາ.
[34]ພວກເຈົ້າຕ້ອງຖືວ່າຄົນຕ່າງຊາດທີ່ອາໃສຢູ່ກັບພວກເຈົ້າກໍເປັນເຫມືອນຊາວອິດສະຣາເອນໂດຍກຳເນີດທີ່ຢູ່ທ່າມກາງພວກເຈົ້າ, ແລະ
ພວກເຈົ້າຕ້ອງຮັກເຂົາເຫມືອນຕົວເອງ, ເພາະພວກເຈົ້າກໍ່ເຄີຍເປັນຄົນຕ່າງຊາດໃນແຜ່ນດິນອີຢິບ, ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ.
[35]ຢ່າໂກງເຄື່ອງວັດທີ່ໃຊ້ວັດຄວາມຍາວຊັ່ງນໍ້າຫນັກ, ຫລືຕວງປະລິມານ.[36]ພວກເຈົ້າຕ້ອງໃຊ້ເຄື່ອງຊັ່ງທີ່ທ່ຽງກົງ, ແລະຖ້ວຍຕວງທີ່ທ່ຽງກົງ,
ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ. ຜູ້ໄດ້ນຳພວກເຈົ້າອອກມາຈາກແຜ່ນດິນເອຢິບ.
[37]ພວກເຈົ້າຕ້ອງເຊື່ອຟັງເຮັດຕາມກົດບັນຍັດທັງຫມົດຂອງເຮົາ, ແລະ ກົດຫມາຍທັງຫມົດຂອງເຮົາ ແລະ ເຮັດຕາມນັ້ນ. ເຮົາຄືຢາເວ.'"


generated on Tue Jun 17 19:01:42 2025

20 1ພຣະຢາເວໄດ້ກ່າວແກ່ໂມເຊວ່າ, 2"ຈົ່ງກ່າວແກ່ປະຊາຊົນອິດສະຣາເອນວ່າ, 'ຄົນໃດໃນທ່າມກາງປະຊາຊົນອິດສະຣາເອນ
ຫລືຄົນຕ່າງຊາດຄົນໃດທີ່ອາໄສຢູ່ໃນອິດສະຣາເອນທີ່ໄດ້ຍົກລູກທັງຫລາຍຂອງຕົນໃຫ້ແກ່ພະໂມເລັກ, ຕ້ອງມີໂທດເຖິງຕາຍຢ່າງແນ່ນອນ.
ປະຊາຊົນໃນແຜ່ນດິນນັ້ນຕ້ອງເອົາຫີນດຶກໃສ່ເຂົາ.

3ເຮົາຈະຕັ້ງຫນ້າເຮົາສູ້ກັບຄົນນັ້ນດ້ວຍແລະຈະຕັດເຂົາອອກຈາກທ່າມກາງຊົນຊາດຂອງເຂົາ
ເພາະເຂົາໄດ້ຍົກລູກທັງຫລາຍຂອງເຂົາໃຫ້ແກ່ພະໂມເລັກ,
ເຮັດໃຫ້ສະຖານບໍລິສຸດຂອງເຮົາເປັນມົນທິນແລະເຮັດໃຫ້ນາມບໍລິສຸດຂອງເຮົາຖືກຢຽດຢາມ.
4ຖ້າປະຊາຊົນແຫ່ງແຜ່ນດິນນັ້ນປິດຫູປິດຕາຂອງພວກເຂົາຕໍ່ຊາຍຄົນນັ້ນເມື່ອເຂົາໄດ້ຍົກລູກທັງຫລາຍຂອງເຂົາໃຫ້ແກ່ພະໂມເລັກ,
ຖ້າພວກເຂົາບໍ່ລົງໂທດຊາຍຄົນນັ້ນເຖິງຕາຍ. 5ເຮົາກໍຈະຕັ້ງຫນ້າສູ້ຄົນນັ້ນແລະເຊື້ອສາຍຂອງເຂົາ, ແລະເຮົາຈະຕັດເຂົາແລະຄົນອື່ນໆ.
ຜູ້ໄດ້ຮ່ວມການບໍ່ຊື່ສັດກັບເຂົາໃນການຫລິ້ນຊູ້ກັບພະໂມເລັກ.
6ຄົນໃດທີ່ເຫັນໄປຫາບັນດາຄົນທີ່ຕິດຕໍ່ເວົ້າກັບຄົນຕາຍ, ຫລືໄປຫາບັນດາຜູ້ທີ່ຕິດຕໍ່ເວົ້າກັບວິນຍານຕ່າງໆ,
ກໍເອົາຕົວເຂົ້າຮ່ວມເຮັດການບໍ່ຊື່ສັດກັບພວກເຂົາ, ເຮົາຈະຕັ້ງຫນ້າສູ້ຄົນນັ້ນ. ເຮົາຈະຕັດເຂົາອອກຈາກຖ່າມກາງຊົນຊາດຂອງເຂົາ.
7ເຫດສະນັ້ນຈົ່ງຊໍາລະຕົວຂອງເຈົ້າແລະຈົ່ງບໍລິສຸດ, ເພາະເຮົາຄືຢາເວພຣະເຈົ້າຂອງເຈົ້າ.
8ເຈົ້າຕ້ອງຮັກສາຄໍາບັນຊາຂອງເຮົາແລະເຮັດຕາມນັ້ນ, ເຮົາຄືຢາເວຜູ້ໄດ້ແຍກພວກເຈົ້າໄວ້ໃຫ້ບໍລິສຸດ.
9ທຸກຄົນທີ່ແຊ່ງດ່າພໍ່ຂອງເຂົາຫລືແມ່ຂອງເຂົາຕ້ອງມີໂທດເຖິງຕາຍຢ່າງແນ່ນອນ, ເຂົາໄດ້ແຊ່ງດ່າພໍ່ຂອງເຂົາຫລືແມ່ຂອງເຂົາ,
ດັ່ງນັ້ນເຂົາມີຄວາມຜິດແລະສົມຄວນຕາຍ.
10ຊາຍຄົນໃດທີ່ລ່ວງປະເວນີກັບເມຍຂອງຊາຍອີກຄົນຫນຶ່ງ, ຄືຄົນໃດທີ່ລ່ວງປະເວນີກັບເມຍຂອງເພື່ອນບ້ານຂອງຕົນ, ຜູ້ລ່ວງປະເວນີທັງຊາຍ
ແລະ ຍິງຕ້ອງມີໂທດເຖິງຕາຍທັງຄູ່ຢ່າງແນ່ນອນ. 11ຊາຍຄົນໃດທີ່ນອນຮ່ວມກັບເມຍຂອງພໍ່ຂອງຕົນ
ເພື່ອຫລັບນອນກັບນາງໄດ້ເຮັດໃຫ້ພໍ່ຂອງຕົນຂາຍຫນ້າ, ທັງລູກຊາຍ ແລະເມຍຂອງພໍ່ຂອງເຂົາຕ້ອງມີໂທດເຖິງຕາຍຢ່າງແນ່ນອນ,
ພວກເຂົາມີຄວາມຜິດ ແລະ ສົມຄວນຕາຍ. 12ຖ້າຊາຍຄົນຫນຶ່ງຫລັບນອນກັບລູກສະໄພ້ຂອງເຂົາ,
ພວກເຂົາທັງສອງຄົນຕ້ອງມີໂທດເຖິງຕາຍຢ່າງແນ່ນອນ. ພວກເຂົາໄດ້ເຮັດການປະພຶດຜິດນອກສິນທໍາ, ພວກເຂົາມີຄວາມຜິດແລະ
ສົມຄວນຕາຍ.
13ຖ້າຊາຍຄົນຫນຶ່ງຫລັບນອນກັບຊາຍອີກຄົນຫນຶ່ງ, ເຫມືອນດັ່ງຫລັບນອນກັບຜູ້ຍິງພວກເຂົາທັງຄູ່ໄດ້ເຮັດສິ່ງທີ່ຫນ້າອາຍ,
ພວກເຂົາຕ້ອງມີໂທດເຖິງຕາຍຢ່າງແນ່ນອນ. ພວກເຂົາມີຄວາມຜິດແລະສົມຄວນຕາຍ.
14ຖ້າຊາຍຄົນຫນຶ່ງແຕ່ງງານກັບຜູ້ຍິງຄົນຫນຶ່ງແລະກໍແຕ່ງງານກັບແມ່ຂອງນາງດ້ວຍ, ນີ້ເປັນຄວາມຊົ່ວຮ້າຍ. ພວກເຂົາຕ້ອງຖືກເຜົາ,
ທັງຊາຍແລະຍິງທັງສອງຄົນ, ເພື່ອຈະບໍ່ມີຄວາມຊົ່ວຮ້າຍໃນຖ່າມກາງພວກເຈົ້າ.
15ຖ້າຊາຍຄົນຫນຶ່ງສົມສູ່ກັບສັດ, ເຂົາຕ້ອງມີໂທດເຖິງຕາຍຢ່າງແນ່ນອນ, ແລະພວກເຈົ້າຕ້ອງຂ້າສັດຕົວນັ້ນ.
16ຖ້າຜູ້ຍິງຄົນຫນຶ່ງເຂົ້າຫາສັດໃດເພື່ອສົມສູ່ກັບມັນ, ພວກເຈົ້າຕ້ອງຂ້າຜູ້ຍິງແລະສັດນັ້ນ, ພວກເຂົາຕ້ອງມີໂທດເຖິງຕາຍຢ່າງແນ່ນອນ.
ພວກເຂົາມີຄວາມຜິດແລະສົມຄວນຕາຍ.
17ຖ້າຊາຍຄົນຫນຶ່ງຫລັບນອນກັບເອື້ອຍຫລືນ້ອງສາວຂອງເຂົາ ບໍ່ວ່າເປັນລູກສາວຂອງພໍ່ຂອງເຂົາຫລືລູກສາວຂອງແມ່ຂອງເຂົາ,
ຖ້າເຂົາຫລັບນອນກັບນາງແລະນາງຫລັບນອນກັບເຂົາ, ນັ້ນເປັນສິ່ງທີ່ຫນ້າອາຍ, ພວກເຂົາຕ້ອງຖືກຕັດອອກຈາກຖ່າມກາງຊົນຊາດຂອງເຂົາ
ເພາະເຂົາໄດ້ຫລັບນອນກັບເອື້ອຍຫລືນ້ອງສາວຂອງຕົນເອງ, ເຂົາຕ້ອງແບກຮັບຄວາມຜິດຂອງເຂົາ.
18ຖ້າຊາຍຄົນຫນຶ່ງຫລັບນອນກັບຜູ້ຍິງໃນຊ່ວງທີ່ນາງມີປະຈໍາເດືອນແລະໄດ້ຮ່ວມຫລັບນອນກັບນາງດ
ເຂົາໄດ້ເປີດຂອງລັບຂອງນາງເຮັດໃຫ້ເລືອດນາງໄຫລ, ທັງຊາຍແລະຍິງນັ້ນຕ້ອງຖືກຕັດອອກຈາກຖ່າມກາງຊົນຊາດຂອງເຂົາ.
19ເຈົ້າຕ້ອງບໍ່ຫລັບນອນກັບເອື້ອຍຫລືນ້ອງສາວຂອງແມ່ເຈົ້າ, ຫລືເອື້ອຍຫລືນ້ອງສາວຂອງພໍ່ເຈົ້າ,
ເພາະວ່າເຈົ້າຈະເຮັດໃຫ້ພີ່ນ້ອງໃກ້ຊິດຂອງເຈົ້າຂາຍຫນ້າ, ເຈົ້າຕ້ອງແບກຮັບຄວາມຜິດຂອງຕົນ. 20ຖ້າຊາຍຄົນຫນຶ່ງຫລັບນອນກັບປ້າຂອງເຂົາ,
ເຂົາໄດ້ລົບຫລູ່ກຽດລຸງຂອງເຂົາ, ເມື່ອພວກເຂົາຕາຍໄປເຮົາຈະລົງໂທດພວກເຂົາທັງຄູ່ ແລະເມື່ອພວກເຂົາຕາຍໄປ. ເຮົາຈະເອົາມໍລະດົກໃດໆ,
ທີ່ລູກທັງຫລາຍຂອງເຂົາອາດໄດ້ຮັບຈາກພໍ່ແມ່ຂອງເຂົາໄປ.
21ຖ້າຊາຍຄົນຫນຶ່ງແຕ່ງງານກັບເມຍຂອງອ້າຍຫລືນ້ອງຊາຍຂອງຕົນໃນຂະນະທີ່ອ້າຍຫລືນ້ອງຊາຍຍັງມີຊີວິດຢູ່, ນີ້ເປັນສິ່ງທີ່ຂາຍຫນ້າ,
ເຂົາໄດ້ລົບລູ່ກຽດອ້າຍຫລືນ້ອງຊາຍຂອງເຂົາອາດຈະໄດ້ຮັບເປັນມໍລະດົກຈາກພໍ່ຂອງພວກເຂົາ.
22ເຫດສະນັ້ນພວກເຈົ້າຕ້ອງຮັກສາກົດບັນຍັດທັງສິ້ນຂອງເຮົາ ແລະ ກົດຫມາຍທັງສິ້ນຂອງເຮົາ;
ພວກເຈົ້າຕ້ອງເຊື່ອຟັງເຮັດຕາມນັ້ນເພື່ອແຜ່ນດິນທີ່ເຮົາຈະພາພວກເຈົ້າເຂົ້າໄປຢູ່ນັ້ນຈະບໍ່ຄາຍພວກເຈົ້າອອກມາ.
23ພວກເຈົ້າຕ້ອງບໍ່ເຮັດຕາມທໍານຽມປະເພນີຂອງຊົນຊາດຕ່າງໆ, ທີ່ເຮົາຈະຂັບໄລ່ອອກໄປຕໍ່ຫນ້າພວກເຈົ້າ,
ເພາະພວກເຂົາໄດ້ເຮັດສິ່ງທັງຫມົດນີ້. ແລະ ເຮົາລັງກຽດພວກເຂົາ.
24ເຮົາໄດ້ບອກພວກເຈົ້າແລ້ວວ່າ, "ພວກເຈົ້າຈະໄດ້ຮັບແຜ່ນດິນຂອງພວກເຂົາເປັນມໍລະດົກເຮົາຈະໃຫ້ພວກເຈົ້າຖືກໍາມະສິດເຫນືອແຜ່ນດິນນັ້ນ,
ເປັນແຜ່ນດິນທີ່ມີນໍ້ານົມແລະນໍ້າເຜີ້ງໄຫລ. ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ. ຜູ້ໄດ້ແຍກພວກເຈົ້າອອກຈາກຊົນຊາດອື່ນ.
25ເຫດສະນັ້ນພວກເຈົ້າຕ້ອງແຍກເບິ່ງໃຫ້ອອກລະຫວ່າງບັນດາສັດທີ່ສະອາດແລະສັດທີ່ເປັນມົນທິນ,
ລະຫວ່າງບັນດາທີ່ເປັນມົນທິນກັບນົກທີ່ສະອາດພວກເຈົ້າຕ້ອງບໍ່ເຮັດຕົວໃຫ້ເປັນມົນທິນດ້ວຍບັນດາສັດຫລືນົກທີ່ເປັນມົນທິນ, ຫລືດ້ວຍສັດໃດໆ,
ທີ່ເລືອຄານໄປເທິງດິນ, ຊຶ່ງເຮົາໄດ້ແຍກອອກຈາກພວກເຈົ້າໃຫ້ເປັນສິ່ງທີ່ເປັນມົນທິນ.
26ພວກເຈົ້າຕ້ອງບໍລິສຸດ, ເພາະເຮົາຢາເວບໍລິສຸດ, ແລະ ເຮົາໄດ້ແຍກພວກເຈົ້າອອກຈາກຊົນຊາດອື່ນໆ, ເພື່ອໃຫ້ພວກເຈົ້າເປັນຂອງເຮົາ.
27ຊາຍຫລືຍິງໃດທີ່ຕິດຕໍ່ເວົ້າກັບຄົນຕາຍຫລືຄົນທີ່ຕິດຕໍ່ເວົ້າກັບວິນຍານຕ່າງໆຕ້ອງມີໂທດເຖິງຕາຍຢ່າງແນ່ນອນ.
ປະຊາຊົນຈະຕ້ອງດຶກພວກເຂົາດ້ວຍກ້ອນຫີນພວກເຂົາມີຄວາມຜິດແລະສົມຄວນຕາຍ.'"

# 21

[1]ພຣະຢາເວໄດ້ກ່າວແກ່ໂມເຊວ່າ, "ຈົ່ງກ່າວແກ່ບັນດາປະໂລຫິດລູກຊາຍທັງຫລາຍຂອງອາໂຣນ, ແລະ ບອກແກ່ພວກເຂົາວ່າ,
'ຢ່າເຮັດໂຕເອງໃຫ້ເປັນມັນທິນດ້ວຍເລື່ອງບັນດາຜູ້ເສຍຊີວິດທ່າມກາງຊົນຊາດຂອງເຂົາ.[2]ນອກຈາກບັນດາພີ່ນ້ອງໃກ້ຊິດຂອງເຂົາ, ແມ່ຂອງເຂົາ,
ພໍ່ຂອງເຂົາ, ລູກຊາຍຂອງເຂົາ, ລູກສາວຂອງເຂົາ.[3]ຫລືອ້າຍນ້ອງຊາຍຂອງເຂົາ, ຜູ້ເປັນພົມມະຈາລີຊຶ່ງຍັງເພິ່ງພາເຂົາ, ເພາະນາງຍັງບໍ່ມີຜົວ,
ເຂົາອາດຍອມເປັນມົນທິນເພາະນາງໄດ້.

[4]ແຕ່ເຂົາຕ້ອງບໍ່ເຮັດໃຫ້ຕົວເອງເປັນມົນທິນດ້ວຍເລື່ອງພີ່ນ້ອງຄົນອື່ນໆ ແລະເຮັດໃຫ້ຕົນເອງເປັນມົນທິນ.
[5]ປະໂລຫິດຕ້ອງບໍ່ແຖຫົວຫລືແຖປາຍຫນວດຂອງເຂົາ ແລະ ບໍ່ເຊືອດຮ່າງກາຍຂອງພວກເຂົາເອງ.
[6]ພວກເຂົາຕ້ອງບໍລິສຸດຕໍ່ພຣະເຈົ້າຂອງພວກເຂົາແລະບໍ່ເຮັດໃຫ້ພຣະນາມຂອງພຣະເຈົ້າຂອງພວກເຂົາຖືກຢຽດຢາມ.
ເພາະພວກປະໂຣຫິດຕ້ອງຖວາຍເຄື່ອງບູຊາແຫ່ງອາຫານຂອງພຣະຢາເວ. ເປັນອາຫານຂອງພຣະເຈົ້າຂອງພວກເຂົາ.
ເຫດນັ້ນພວກປະໂຣຫິດຕ້ອງບໍລິສຸດ.
[7]ພວກເຂົາຕ້ອງບໍ່ແຕ່ງງານກັບຜູ້ຍິງໃດທີ່ເປັນໂສເພນີ ແລະ ຄົນທີ່ເປັນມົນທິນ, ແລະ
ພວກເຂົາຕ້ອງບໍ່ແຕ່ງງານກັບຜູ້ຍິງຄົນໃດທີ່ຢ່າຮ້າງຈາກຜົວຂອງນາງ.[8]ເພາະພວກເຂົາຖືກແບກໄວ້ສຳຫລັບພຣະເຈົ້າຂອງພວກເຂົາ.
ເຈົ້າຈະຕ້ອງແຍກເຂົາໄວ້ຕ່າງຫາກເພາະເຂົາເປັນຜູ້ຖວາຍອາຫານແດ່ພຣະເຈົ້າຂອງເຈົ້າ, ເຂົາຕ້ອງບໍລິສຸດສຳລັບເຈົ້າ.
ເພາະເຮົາຢາເວຜູ້ເຮັດໃຫ້ເຈົ້າບໍລິສຸດ, ເຮົາບໍລິສຸດ.
[9]ລູກຍິງຂອງປະໂຣຫິດຄົນໃດທີ່ເຮັດຕົວເອງໃຫ້ເປັນມົນທິນໂດຍການເປັນໂສເພນີເຮັດໃຫ້ພໍ່ຂອງນາງຂາຍຫນ້າ. ນາງຕ້ອງຖືກເຜົາ.
[10]ຜູ້ທີ່ເປັນມະຫາປະໂຣຫິດໃນຖ່າມກາງພີ່ນ້ອງຂອງເຂົາ, ຜູ້ທີ່ຖືກເຈີມຫົວດ້ວຍນ້ຳມັນແຫ່ງການຊົງເຈີມ,
ແລະຜູ້ທີ່ໄດ້ຊຳລະຕົວໃຫ້ບໍລິສຸດເພື່ອສວມເຄື່ອງແຕ່ງກາຍພິເສດຂອງມະຫາປະໂຣຫິດ, ຕ້ອງບໍ່ປ່ອຍຜົມ ຫລື ຈີກເສື້ອຜ້າຂອງຕົນ.
[11]ເຂົາຕ້ອງບໍ່ໄປທີ່ໃດກໍຕາມທີ່ມີສົບຢູ່ ແລະ ເຮັດຕົວເອງໃຫ້ເປັນມົນທິນ, ແມ້ວ່າເພື່ອພໍ່ຫລືແມ່ຂອງເຂົາກໍຕາມ.
[12]ມະຫາປະໂຣຫິດຕ້ອງບໍ່ອອກຈາກບໍລິເວນສະຖານນະມັດສະການແຫ່ງພັບພາ
ຫລືເຮັດໃຫ້ສະຖານນະມັດສະການຂອງພຣະເຈົ້າຂອງເຂົາຖືກຢຽດຢາມເພາະເຂົາໄດ້ຮັບການຊຳລະໃຫ້ບໍລິສຸດແລ້ວໃນຖານະມະຫາປະໂຣຫິດໂດຍນ້ຳມັນແຫ່ງ
ເຮົາຄືຢາເວ.
[13]ມະຫາປະໂຣຫິດຕ້ອງແຕ່ງງານກັບຍິງພົມມະຈາລີເພື່ອໃຫ້ເປັນເມຍຂອງເຂົາ.[14]ເຂົາຕ້ອງບໍ່ແຕ່ງງານກັບຍິງຫມ້າຍ, ຍິງທີ່ຢ່າຮ້າງ,
ຫລືຍິງທີ່ເປັນໂສເພນີ, ເຂົາຈະບໍ່ແຕ່ງງານກັບຍິງປະເພດນີ້. ເຂົາຈະແຈ່ງງານກັບຍິງພົມມະຈາລີຈາກຊົນຊາດຂອງຕົນເອງເທົ່ານັ້ນ.
[15]ເພື່ອເຂົາຈະບໍ່ເຮັດໃຫ້ລູກຫລານຂອງພວກເຂົາເປັນມົນທິນຖ່າມກາງຊົນຊາດຂອງເຂົາ. ເພາະເຮົາຄືຢາເວຜູ້ເຮັດໃຫ້ເຂົາບໍລິສຸດ.'"
[16]ພຣະຢາເວກ່າວແກ່ໂມເຊວ່າ,[17]"ຈົ່ງກ່າວກັບອາໂຣນແລະບອກເຂົາວ່າ,
'ຄົນໃດໃນເຊື້ອສາຍຂອງພວກເຈົ້າໃນຕະຫລອດຊົ່ວອາຍຸທີ່ມີຮ່າງກາຍພິການ, ເຂົາຕ້ອງບໍ່ເຂົ້າມາຖວາຍອາຫານແດ່ພຣະເຈົ້າຂອງເຂົາ.
[18]ຊາຍໃດທີ່ມີຮ່າງກາຍພິການຕ້ອງບໍ່ເຂົ້າໄປໃກ້ພຣະຢາເວເຊັ່ນຄົນຕາບອດຫລືຄົນທີ່ບໍ່ສາມາດຍ່າງໄດ້, ຄົນທີ່ຮູບຮ່າງບໍ່ສົມປະກອບຫລືບິດບ້ຽວ.
[19]ຄົນທີ່ພິການທີ່ມືຫລືຕີນ.[20]ຄົນຫລັງຄ່ອມຫລືຄົນຜອມຫລືເຕ້ຍຜິດປົກກະຕິ, ຫລືຄົນທີ່ຕາຂອງເຂົາພິການ, ຫລືມີໂລກ, ຂີ້ກາກ, ຫິດ, ຫລື
ຄົນທີ່ລູກອັນທະທີ່ຕອນ.
[21]ຫ້າມຄົນໃດໃນທ່າມກາງເຊື້ອສາຍຂອງອາໂຣນຜູ້ເປັນປະໂຣຫິດທີ່ມີຮ່າງກາຍພິການເຂົ້າມາໃກ້ເພື່ອຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ.
ເພາະຄົນແບບນັ້ນມີຮ່າງກາຍພິການ, ເຂົາຕ້ອງບໍ່ເຂົ້າມາໃກ້ເພື່ອຖວາຍອາຫານແຫ່ງພຣະເຈົ້າຂອງເຂົາ.
[22]ແຕ່ເຂົາສາມາດກິນອາຫານຂອງພຣະເຈົ້າຂອງເຂົາໄດ້, ບໍ່ວ່າຈະເປັນບາງສ່ວນຈາກຂອງທີ່ບໍລິສຸດທີ່ສຸດຫລືບາງສ່ວນຈາກຂອງທີ່ບໍລິສຸດ.
[23]ຢ່າງໃດກໍຕາມ ເຂົາຕ້ອງບໍ່ເຂົ້າໄປພາຍໃນຜ້າກັ້ງຫລືເຂົ້າມາໃກ້ແທ່ນບູຊາ, ເພາະເຂົາມີຮ່າງກາຍພິການ,
ເພື່ອເຂົາຈະບໍ່ເຮັດໃຫ້ສະຖານບໍລິສຸດຂອງເຮົາເປັນມັນທິນ. ເພາະເຮົາຄືຢາເວ.
ຜູ້ເຮັດໃຫ້ພວກເຂົາບໍລິສຸດ.'"[24]ດັ່ງນັ້ນໂມເຊຈຶ່ງໄດ້ກ່າວຖ້ອຍຄຳເຫລົ່ານີ້ໃຫ້ແກ່ອາໂຣນ, ແກ່ລູກຊາຍທັງຫລາຍຂອງເຂົາ,
ແລະແກ່ຊົນຊາດອິດສະລາເອນ.


generated on Tue Jun 17 19:01:42 2025

22 [1]ພຣະຢາເວກ່າວແກ່ໂມເຊວ່າ, [2]"ຈົ່ງກ່າວແກ່ອາໂຣນແລະແກ່ລູກຊາຍທັງຫລາຍຂອງເຂົາ,
ຈົ່ງບອກພວກເຂົາໃຫ້ຢູ່ຫ່າງຈາກສິ່ງບໍລິສຸດຂອງປະຊາຊົນອິສະຣາເອນ,
ຊຶ່ງພວກເຂົາໄດ້ແຍກໄວ້ເພື່ອເຮົາພວກເຂົາຕ້ອງບໍ່ເຮັດໃຫ້ນາມຂອງເຮົາຖືກຢຽດຢາມ, ເຮົາຄືຢາເວ. [3]ຈົ່ງບອກພວກເຂົາວ່າ,
'ຖ້າເຊື້ອສາຍຂອງພວກເຈົ້າຄົນໃດໃນຕະຫລອດຊົ່ວອາຍຸຂອງພວກເຈົ້າເຂົ້າໃກ້ສິ່ງທີ່ບໍລິສຸດທີ່ປະຊາຊົນອິດສະຣາເອນໄດ້ແຍກໄວ້ແດ່ພຣະຢາເວ,
ໃນຂະນະທີ່ເຂົາເປັນມົນທິນ ຄົນນັ້ນຈະຕ້ອງຖືກຕັດອອກຈາກຫນ້າເຮົາ. ເຮົາຄືຢາເວ.

[4]ຫລືມີສິ່ງທີ່ຕິດເຊື້ອໄຫລອອກຈາກຮ່າງກາຍຂອງເຂົາຮັບປະທານເຄື່ອງບູຊາໃດໆ, ທີ່ຖວາຍແດ່ພຣະຢາເວຈົນກວ່າເຂົາຈະບໍລິສຸດ,
ຄົນໃດກໍ່ຕາມທີ່ແຕະຕ້ອງສິ່ງທີ່ເປັນມົນທິນໃດໆ, ໂດຍການແຕະຕ້ອງສົບ, ຫລືໂດຍແຕະຕ້ອງຊາຍໃດທີ່ຫລັ່ງນໍ້າກາມ.
[5]ຫລືຄົນໃດແຕະຕ້ອງສັດເລືອຄານທີ່ເຮັດໃຫ້ເຂົາເປັນມົນທິນ, ຫລືແຕະຕ້ອງຄົນໃດທີ່ເຮັດໃຫ້ເຂົາເປັນມົນທິນ, ບໍ່ວ່າເປັນມົນທິນແບບໃດກໍ່ຕາມ.
[6]ແລ້ວປະໂຣຫິດຜູ້ທີ່ແຕະຕ້ອງມົນທິນໃດໆ, ຈະເປັນມົນທິນໄປຈົນເຖິງເວລາຕອນແລງ.
ເຂົາຕ້ອງບໍ່ກິນສິ່ງບໍລິສຸດໃດໆນອກຈາກເຂົາໄດ້ອາບນໍ້າແລ້ວ.
[7]ເມື່ອດວງຕາເວັນຕົກແລ້ວ, ເຂົາຈຶ່ງຈະສະອາດ,
ຫລັງຈາກດວງຕາເວັນຕົກເຂົາຈຶ່ງສາມາດກິນຂອງທີ່ບໍລິສຸດນັ້ນໄດ້ເພາະວ່າເປັນອາຫານຂອງເຂົາ.
[8]ເຂົາຕ້ອງບໍ່ກິນຫຍັງທີ່ພົບວ່າຕາຍໄປແລ້ວຫລືຖືກສັດປ່າຂ້າ, ຊຶ່ງຈະເຮັດໃຫ້ເຂົາເອງເປັນມົນທິນ. ເຮົາຄືຢາເວ.
[9]ປະໂຣຫິດທັງຫລາຍຕ້ອງເຮັດຕາມຄໍາສັ່ງສອນຂອງເຮົາ, ບໍ່ສະນັ້ນພວກເຂົາຈະມີຄວາມຜິດບາບແລະອາດຕາຍເພາະລົບລູ່ເຮົາ.
ເຮົາຄືຢາເວຜູ້ເຮັດໃຫ້ພວກເຂົາບໍລິສຸດ.
[10]ຫ້າມຄົນພາຍນອກຄອບຄົວຂອງປະໂຣຫິດ ລວມເຖິງແຂກທັງຫລາຍຂອງປະໂຣຫິດ ຫລືລູກຈ້າງຂອງເຂົາກິນສິ່ງໃດທີ່ເປັນຂອງບໍລິສຸດ.
[11]ແຕ່ຖ້າປະໂຣຫິດໄດ້ຊື້ທາດຄົນໃດດ້ວຍເງິນຂອງເຂົາເອງ, ທາດນັ້ນກໍ່ຮັບກິນຂອງທີ່ໄດ້ແຍກໄວ້ແດ່ພຣະຢາເວໄດ້,
ສະມາຊິກໃນຄອບຄົວຂອງປະໂຣຫິດແລະທາດທັງຫລາຍກິນຂອງເຫລົ່ານັ້ນຮ່ວມກັບເຂົາໄດ້.
[12]ຖ້າລູກຍິງຂອງປະໂຣຫິດໄດ້ແຕ່ງງານກັບຄົນທີ່ບໍ່ເປັນປະໂຣຫິດ, ນາງບໍ່ສາມາດກິນຂອງຖວາຍໃດໆທີ່ບໍລິສຸດໄດ້.
[13]ແຕ່ຖ້າລູກຍິງຂອງປຸໂຣຫິດເປັນຍິງຫມ້າຍ, ຫລືຢ່າຮ້າງ,
ແລະຖ້ານາງບໍ່ມີລູກແລະຖ້ານາງໄດ້ກັບມາອາໃສຢູ່ບ້ານພໍ່ຂອງນາງເຫມືອນເມື່ອຕອນເປັນສາວ, ນາງສາມາດກິນອາຫານຂອງບິດາຂອງນາງໄດ້.
ແຕ່ຫ້າມຄົນທີ່ບໍ່ຢູ່ໃນຄອບຄົວຂອງປະໂຣຫິດກິນອາຫານປະໂຣຫິດ.
[14]ເຂົາຕ້ອງຊົດໃຊ້ຄືນໃຫ້ແກ່ປະໂຣຫິດ, ເຂົາຕ້ອງເພີ່ມໃຫ້ອີກຫນຶ່ງໃນຫ້າແລະມອບຄືນແກ່ປະໂຣຫິດ.
[15]ປະຊາຊົນອິດສະຣາເອນຕ້ອງບໍ່ລົບລູ່ກຽດສິ່ງທີ່ບໍລິສຸດທີ່ໄດ້ຍົກຂຶ້ນແລະຖວາຍແດ່ພຣະຢາເວ.
[16]ເຮັດໃຫ້ພວກເຂົາຕ້ອງແບກຮັບຄວາມບາບທີ່ເຮັດໃຫ້ພວກເຂົາມີຄວາມຜິດແຫ່ງການກິນອາຫານທີ່ບໍລິສຸດ.
ເພາະເຮົາຄືຢາເວຜູ້ທີ່ເຮັດໃຫ້ພວກເຂົາບໍລິສຸດ.'"
[17]ພຣະຢາເວກ່າວແກ່ໂມເຊວ່າ, [18]"ຈົ່ງກ່າວແກ່ອາໂຣນແລະລູກຊາຍທັງຫລາຍຂອງເຂົາ,
ແລະແກ່ປະຊາຊົນອິດສະຣາເອນທັງປວງຈົ່ງບອກພວກເຂົາວ່າ, 'ຄົນອິດສະຣາເອນຫລືຄົນຕ່າງຊາດຄົນໃດທີ່ອາໃສຢູ່ໃນອິດສະຣາເອນ,
ເມື່ອພວກເຂົາຖວາຍເຄື່ອງບູຊາບໍ່ວ່າເປັນເຄື່ອງບູຊາເພື່ອປະຕິຍານຫລືບໍ່ວ່າເປັນເຄື່ອງບູຊາດ້ວຍໃຈສະຫມັກ,
ຫລືບໍ່ວ່າເປັນເຄື່ອງເຜົາບູຊາແດ່ພຣະຢາເວ. [19]ຖ້າຈະໃຫ້ເປັນເຄື່ອງບູຊາທີ່ພໍໃຈ, ພວກເຂົາຕ້ອງຖວາຍສັດຕົວຜູ້ທີ່ປາສະຈາກຕໍານິ,
ທີ່ເອົາມາຈາກຝູງງົວຝູງແກະຫລືຝູງແບ້.
[20]ແຕ່ພວກເຈົ້າຕ້ອງບໍ່ຖວາຍສິ່ງໃດໆ, ທີ່ມີຕໍານິ. ເຮົາຈະບໍ່ພໍໃຈສິ່ງທີ່ພວກເຈົ້າຖວາຍ.
[21]ຄົນໃດຖວາຍເຄື່ອງສັນຕິບູຊາທີ່ເອົາມາຈາກຝູງໂຄຫລືຝູງແບ້ແກະແດ່ພຣະຢາເວເພື່ອແກ້ຄໍາປະຕິຍານຫລືເປັນເຄື່ອງບູຊາດ້ວຍໃຈສະຫມັກເຄື່ອງບູຊານັ້ນຈະຕ້ອງ
ສັດນັ້ນຕ້ອງບໍ່ພິການ.
[22]ພວກເຈົ້າຕ້ອງບໍ່ຖວາຍສັດໃດໆ, ທີ່ຕາບອດ, ພິການຫລືເປັນແຜທີ່ມີສິ່ງທີ່ໄຫລອອກ, ເປັນຂີ້ກາກ, ຫລືເປັນຫິດ
ພວກເຈົ້າຕ້ອງບໍ່ຖວາຍສິ່ງເຫລົ່ານີ້ແດ່ພຣະຢາເວໃຫ້ເປັນເຄື່ອງເຜົາບູຊາດ້ວຍໄຟເທິງແທ່ນບູຊາ.
[23]ເຈົ້າສາມາດຖວາຍເຄື່ອງບູຊາດ້ວຍສະຫມັກໃຈດ້ວຍງົວຫລືລູກແກະທີ່ພິການຫລືໂຕນ້ອຍໄດ້.
ແຕ່ເຄື່ອງບູຊາແບບນັ້ນຈະບໍ່ເປັນທີ່ພໍໃຈຖ້າຖວາຍເພື່ອແກ້ຄໍາປະຕິຍານ.
[24]ຢ່າຖວາຍສັດໃດໆ ແດ່ພຣະຢາເວທີ່ມີລູກອັນທະຊໍ້າ, ຖືກທຸບ ຈີກຂາດ, ຫລືມີຮອຍຕັດ, ຢ່າເຮັດແບບນີ້ໃນແຜ່ນດິນຂອງພວກເຈົ້າ.
[25]ພວກເຈົ້າຕ້ອງບໍ່ຖວາຍອາຫານຂອງພຣະເຈົ້າຂອງເຈົ້າຈາກມືຂອງຄົນຕ່າງຊາດ, ສັດຕ່າງໆ, ເຫລົ່ານັ້ນມີຕໍາຫນິແລະພິການ,
ພວກເຈົ້າຈະບໍ່ໄດ້ຮັບຄວາມພໍໃຈ.
[26]ພຣະຢາເວກ່າວແກ່ໂມເຊວ່າ, [27]"ເມື່ອງົວຫລືແກະຫລືແບ້ອອກລູກມາ, ມັນຕ້ອງຢູ່ກັບແມ່ຂອງມັນເຈັດວັນດ ແລ້ວຕັ້ງແຕ່ວັນທີແປດເປັນຕົ້ນໄປ,
ມັນສາມາດເປັນເຄື່ອງບູຊາສໍາຫລັບຖວາຍແດ່ພຣະຢາເວດ້ວຍໄຟຊຶ່ງເປັນທີ່ພໍໃຈໄດ້.
[28]ຢ່າຂ້າແມ່ງົວຫລືແມ່ແກະພ້ອມກັບລູກຂອງມັນໃນມື້ດຽວກັນ. [29]ເມື່ອພວກເຈົ້າຖວາຍເຄື່ອງບູຊາແຫ່ງການຂອບພຣະຄຸນແດ່ພຣະຢາເວ.
ພວກເຈົ້າຕ້ອງຖວາຍເຄື່ອງບູຊາໃຫ້ເປັນທີ່ພໍໃຈ. [30]ເຄື່ອງບູຊານັ້ນຕ້ອງຖືກກິນໃນມື້ດຽວກັນທີ່ຖວາຍເຄື່ອງບູຊາ,
ພວກເຈົ້າຕ້ອງບໍ່ເຫລືອອາຫານໄວ້ຈົນເຖິງເຊົ້າ. ເຮົາຄືຢາເວ.
[31]ດັ່ງນັ້ນພວກເຈົ້າຕ້ອງຮັກສາກົດບັນຍັດຂອງເຮົາ ແລະເຮັດຕາມນັ້ນ. ເຮົາຄືຢາເວ. [32]ພວກເຈົ້າຕ້ອງບໍ່ລົບລູ່ກຽດພຣະນາມອັນບໍລິສຸດຂອງເຮົາ.
ປະຊາຊົນອິດສະຣາເອນຕ້ອງຍອມຮັບວ່າເຮົາບໍລິສຸດ. ເຮົາຄືຢາເວຜູ້ເຮັດໃຫ້ພວກເຈົ້າບໍລິສຸດ,
[33]ຜູ້ທີ່ໄດ້ນໍາພວກເຈົ້າອອກມາຈາກແຜ່ນດິນເອຢິບເພື່ອເປັນພຣະເຈົ້າຂອງພວກເຈົ້າ: ເຮົາຄືຢາເວ."

23 [1]ພຣະຢາເວໄດ້ກ່າວແກ່ໂມເຊວ່າ, [2]"ຈົ່ງກ່າວແກ່ອິດສະຣາເອນ, ແລະ ບອກເຂົາວ່າ,
'ຕໍ່ໄປນີ້ຄືເທດສະການລ້ຽງຕ່າງໆທີ່ຖືກກຳໜົດໄວ້ແດ່ພຣະຢາເວທີ່ພວກເຈົ້າຕ້ອງປະກາດໃຫ້ເປັນການປະຊຸມບໍລິສຸດ;
ເປັນເທດສະການລ້ຽງປະຈຳຂອງເຮົາ.

[3]ພວກເຈົ້າເຮັດວຽກໃນຫົກມື້, ແຕ່ວັນທີເຈັດເປັນວັນສະບາໂຕແຫ່ງການຫຍຸດພັກຢ່າງສົມບູນດເປັນການປະຊຸມບໍລິສຸດ,
ພວກເຈົ້າບໍ່ຕ້ອງເຮັດວຽກເພາະເປັນວັນສະບາໂຕແດ່ພຣະຢາເວໃນທຸກແຫ່ງທີ່ເຈົ້າອາໄສຢູ່.
[4]ຕໍ່ໄປນີ້ເປັນເທດສະການລ້ຽງທີ່ກຳນົດໄວ້ຂອງພຣະຢາເວ. ເປັນການປະຊຸມທີ່ພວກເຈົ້າຕ້ອງປະກາດໃຫ້ຮູ້ເມື່ອເຖິງເວລາເທົ່າກຳນົດໄວ້.
[5]ໃນຕອນແລງຂອງວັນທີສິບສີ່, ເດືອນທີໜຶ່ງ, ເປັນປັດສະກາຂອງພຣະຢາເວ.
[6]ໃນວັນທີສິບຫ້າຂອງເດືອນດຽວກັນເປັນເທດສະການກິນຂະໜົມປັງບໍ່ມີເຊື້ອແປ້ງເປັນເວລາເຈັດວັນ.
[7]ໃນມື້ທຳອິດພວກເຈົ້າຕ້ອງຈັດໃຫ້ມີການຊຸມນຸມພ້ອມກັນພວກເຈົ້າຈະບໍ່ເຮັດວຽກປະຈຳຂອງພວກເຈົ້າ.
[8]ພວກເຈົ້າຈະຖວາຍເຄື່ອງບູຊາອາຫານແດ່ພຣະຢາເວເປັນເວລາເຈັດວັນ, ໃນວັນທີເຈັດເປັນການປະຊຸມທີ່ຈັດໄວ້ແດ່ພຣະຢາເວ.
ແລະໃນວັນນັ້ນພວກເຈົ້າຕ້ອງບໍ່ເຮັດວຽກປະຈຳ.
[9]ພຣະຢາເວໄດ້ຕັດກັບໂມເຊວ່າ, [10]"ຈົ່ງກ່າວກັບຄົນອິດສະຣາເອນ ແລະ ບອກພວກເຂົາວ່າ,
'ເມື່ອພວກເຈົ້າເຂົ້າມາໃນແຜ່ນດິນຊຶ່ງເຮົາຈະເຮັດໃຫ້ແກ່ພວກເຈົ້າ, ແລະເມື່ອພວກເຈົ້າເກັບກ່ຽວຈາກແຜ່ນດິນນັ້ນ,
ພວກເຈົ້າຕ້ອງເອົາຜົນທຳອິດໜຶ່ງມັດໄປໃຫ້ປະໂຣຫິດ.
[11]ແລະປະໂຣຫິດຈະເອົາມັດເຂົ້ານັ້ນຂຶ້ນຕໍ່ພະພັກພຣະຢາເວເມື່ອພວກເຈົ້າຈະເປັນທີ່ພໍພະໄທ.
ໃນມື້ຕໍ່ໄປຈາກວັນສະບາໂຕເປັນວັນທີ່ປະໂຣຫິດຈະຍົກເຄື່ອງບູຊາຂຶ້ນແລະຖວາຍໃຫ້ແກ່ເຮົາ.
[12]ໃນມື້ທີ່ພວກເຈົ້າມັດເຂົ້າຊູຟ່ອນເຂົ້ານັ້ນຂຶ້ນ, ແລະຖວາຍແກ່ເຮົາ,
ພວກເຈົ້າຕ້ອງຖວາຍລູກແກະໂຕໜຶ່ງອາຍຸໜຶ່ງປີທີ່ປາສະຈາກການຕຳໜິໃຫ້ເປັນເຄື່ອງບູຊາແດ່ພຣະຢາເວ.
[13]ເຄື່ອງຖວາຍບູຊາຕ້ອງເປັນແປ້ງຢ່າງດີນໍ້າມັນໝາກກອກເທດສອງກິໂລກຣາມ ເປັນເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ.
ເພື່ອໃຫ້ເກີດກິ່ນຫອມພ້ອມກັບເຫລົ້າອະງຸ່ນໜຶ່ງລິດເຊັ່ນດຽວກັນເປັນເຄື່ອງບູຊາດື່ມຖວາຍ. [14]ພວກເຈົ້າຕ້ອງບໍ່ກິນຂະໜົມປັງ,
ເຂົ້າຂົ້ວຫລືເຂົ້າດິບຈົນກວ່າຈະເຖິງວັນດຽວກັນທີ່ພວກເຈົ້າໄດ້ຖວາຍເຄື່ອງບູຊານີ້ແດ່ພຣະເຈົ້າຂອງພວກເຈົ້າ,
ນີ້ເປັນກົດເກນຖາວອນຂອງເຈົ້າໃນທຸກແຫ່ງທີ່ເຈົ້າອາໄສຢູ່.
[15]ເລີ່ມຕົ້ນຈາກວັນຖັດຈາກວັນສະບາໂຕຊຶ່ງເປັນວັນທີ່ພວກເຈົ້ານຳຟ່ອນເຂົ້າແຫ່ງເຄື່ອງບູຊາມາໂບກຖວາຍ, ຈົ່ງນັບໃຫ້ຄົບເຈັດອາທິດ.
[16]ພວກເຈົ້າຕ້ອງນັບໄປເຖິງຫ້າສິບວັນ, ຊຶ່ງຈະເປັນວັນຖັດຈາກສະບາໂຕທີເຈັດ,
ແລ້ວພວກເຈົ້າຕ້ອງຖວາຍເມັດໃຫມ່ແດ່ພຣະຢາເວເປັນເຄື່ອງຖວາຍບູຊາ.
[17]ພວກເຈົ້າຕ້ອງນຳຂະໜົມປັງສອງກ້ອນເຮັດຈາກແປ້ງສອງກິໂລກຣາມຈາກທີ່ຢູ່ອາໄສຂອງພວກເຈົ້າຂະໜົມປັງຕ້ອງເຮັດຈາກແປ້ງຢ່າງດີທີ່ໃສ່ເຊື້ອແປ້ງແລະອົບ,
ນັ້ນຈະເປັນເຄື່ອງບູຊາຍໍຖວາຍແຫ່ງຜົນທຳອິດແດ່ພຣະຢາເວ. [18]ສິ່ງທີ່ພວກເຈົ້າຕ້ອງຖວາຍພ້ອມກັບຂະໜົມປັງນັ້ນຄື
ລູກແກະເຈັດໂຕທີ່ມີອາຍຸໜຶ່ງປີ ແລະປາສະຈາກຕຳໜິ, ງົວຫນຸ່ມໜຶ່ງໂຕ,
ແກະຜູ້ສອງໂຕມາເປັນເຄື່ອງບູຊາແດ່ພຣະຢາເວພ້ອມກັບເຄື່ອງຖວາຍເຄື່ອງບູຊາ, ແລະເປັນເຄື່ອງບູຊາຂອງພວກເຂົາ,
ເປັນເຄື່ອງຖວາຍດ້ວຍໄຟແລະເກີດເປັນກິ່ນຫອມແດ່ພຣະຢາເວ.
[19]ພວກເຈົ້າຕ້ອງຖວາຍແບ້ໂຕໜຶ່ງເປັນເຄື່ອງບູຊາລົບລ້າງບາບ ແລະລູກແກະໂຕຜູ້ອາຍຸໜຶ່ງປີສອງໂຕເພື່ອຖວາຍເປັນເຄື່ອງບູຊາ.
[20]ປະໂຣຫິດຕ້ອງຍໍເຄື່ອງບູຊາຖວາຍພ້ອມກັບຂະໜົມປັງຊຶ່ງເປັນຜົນທຳອິດຕໍ່ພະພັກພຣະຢາເວ.
ແລະຖວາຍເຄື່ອງບູຊາເຫລົ່ານັ້ນພ້ອມກັບລູກແກະສອງໂຕແດ່ພຣະອົງເຄື່ອງບູຊາເຫລົ່ານັ້ນຈະເປັນຂອງຖວາຍບໍລິສຸດແດ່ພຣະຢາເວສຳຫລັບປະໂຣຫິດ.
[21]ໃນວັນດຽວກັນພວກເຈົ້າຕ້ອງປະກາດໃຫ້ມີປະຊຸມບໍລິສຸດ, ແລະພວກເຈົ້າບໍ່ເຮັດງານປະຈຳ,
ນີ້ເປັນກົດເກນຖາວອນຕະຫລອດໄປຂອງເຈົ້າໃນທຸກແຫ່ງທີ່ພວກເຈົ້າອາໄສຢູ່.
[22]ເມື່ອພວກເຈົ້າເກັບກ່ຽວພືດຜົນຈາກແຜ່ນດິນຂອງພວກເຈົ້າ ພວກເຈົ້າຕ້ອງບໍ່ຕ້ອງເກັບກ່ຽວຕາມມຸມຂອງທົ່ງນາຈົນໝົດ, ແລະ
ພວກເຈົ້າຕ້ອງເກັບເມັດທີ່ຕົກ, ພວກເຈົ້າຕ້ອງຖິ້ມໄວ້ສຳຫລັບຄົນຍາກຈົນ ແລະ ສຳລັບຄົນຕ່າງດ້າວ, ເຮົາຄືຢາເວພຣະເຈົ້າຂອງພວກເຈົ້າ."'
[23]ພຣະຢາເວກ່າວແກ່ໂມເຊວ່າ, [24]"ຈົ່ງກ່າວແກ່ຄົນອິດສະຣາເອນວ່າ, 'ໃນວັນທີໜຶ່ງຂອງເດືອນທີເຈັດຈະເປັນມື້ພັກຢ່າງຈິງຈັງສຳຫລັບພວກເຈົ້າ,
ເປັນສັນຍານດ້ວຍການເປົ່າແກ ແລະເປັນການປະຊຸມບໍລິສຸດ. [25]ພວກເຈົ້າຕ້ອງບໍ່ເຮັດວຽກປະຈຳຂອງພວກເຈົ້າ ແລະ
ຕ້ອງຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ."'
[26]ພຣະຢາເວໄດ້ກ່າວແກ່ໂມເຊວ່າ, [27]"ໃນວັນທີສິບຂອງເດືອນທີເຈັດນີ້ເປັນວັນລົບລ້າງມົນທິນ, ເປັນການປະຊຸມບໍລິສຸດ, ແລະ
ພວກເຈົ້າຕ້ອງຖ່ອມໂຕລົງ, ແລະ ຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ.
[28]ພວກເຈົ້າຕ້ອງບໍ່ເຮັດວຽກໃນວັນນັ້ນເພາະເປັນວັນລົບມົນທິນທີ່ຈະລົບມົນທິນຂອງໂຕພວກເຈົ້າເອງ,
ສະເພາະພຣະພັກພຣະຢາເວພຣະເຈົ້າຂອງພວກເຈົ້າ. [29]ໃນວັນນັ້ນ ຖ້າຜູ້ໃດບໍ່ຖ່ອມໂຕເອງລົງຈະຕ້ອງຖືກຕັດອອກຈາກຊົນຊາດຂອງເຂົາ.
[30]ຖ້າຜູ້ໃດເຮັດວຽກງານໃດ ໃນວັນນັ້ນ, ເຮົາພຣະຢາເວຈະທຳລາຍຜູ້ນັ້ນໄປເສຍຈາກທ່າມກາງປະຊາຊົນຂອງເຂົາ.
[31]ພວກເຈົ້າຕ້ອງບໍ່ເຮັດວຽກງານໃດໆ ໃນວັນນັ້ນ, ນີ້ຈະເປັນກົດເກນຖາວອນຕະຫລອດຊົ່ວເຊື້ອສາຍຂອງເຈົ້າໃນທຸກແຫ່ງທີ່ພວກເຈົ້າອາໄສຢູ່.
[32]ວັນນີ້ຕ້ອງເປັນວັນສະບາໂຕແຫ່ງການຫຍຸດພັກຢ່າງຈິງຈັງສຳລັບພວກເຈົ້າ, ແລະ
ພວກເຈົ້າຕ້ອງຖ່ອມໂຕລົງເລີ່ມຕັ້ງແຕ່ເວລາຕອນແລງທີ່ເກົ້າຂອງເດືອນນັ້ນ,
ພວກເຈົ້າຕ້ອງຖືຮັກສາວັນສະບາໂຕຂອງພວກເຈົ້າຈາກເວລາຕອນແລງເຖິງຕອນຄ່ຳມື້ດ.
[33]ພຣະຢາເວໄດ້ຕັດແກ່ໂມເຊວ່າ, [34]"ຈົ່ງກ່າວແກ່ຄົນອິດສະຣາເອນວ່າ,
'ໃນວັນທີສິບຫ້າຂອງເດືອນທີເຈັດຈະເປັນວັນເທດສະການຖ້າຢູ່ໄຟຖວາຍແດ່ພຣະຢາເວຈະຖືຢູ່ເຈັດວັນ.


generated on Tue Jun 17 19:01:42 2025

[35]ໃນມື້ທຳອິດມີການປະຊຸມບໍລິສຸດພວກເຈົ້າຕ້ອງບໍ່ເຮັດວຽກປະຈຳ.[36]ພວກເຈົ້າຕ້ອງຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວເປັນເວລາເຈັດວັນ,
ໃນວັນທີແປດຈະຕ້ອງມີການປະຊຸມບໍລິສຸດ ແລະພວກເຈົ້າຕ້ອງຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ. ນີ້ເປັນການປະຊຸມຕາມພິທີ, ແລະ
ພວກເຈົ້າຕ້ອງບໍ່ເຮັດວຽກງານໃດໆ.
[37]ຕໍ່ໄປນີ້ເປັນເທດສະການລ້ຽງຕາມກຳນົດແດ່ພຣະຢາເວ,
ຊຶ່ງພວກເຈົ້າຕ້ອງປະກາດເປັນປະຊຸມບໍລິສຸດເພື່ອຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຢາເວ, ຄືເຄື່ອງເຜົາບູຊາ
ແລະເຄື່ອງຖວາຍບູຊາເຄື່ອງສັດບູຊາ. ໃຫ້ຖວາຍແຕ່ລະຢ່າງຕາມທີ່ກຳນົດໄວ້ໃນແຕ່ລະວັນ.
[38]ເທດສະການລ້ຽງເຫລົ່ານີ້ຈະເພີ່ມເຕີມເຂົ້າໄປນອກເຫນືອຈາກວັນສະບາໂຕຂອງພຣະຢາເວ ແລະ ຖວາຍຂອງພວກເຈົ້າ,
ການປະຕິຍານຕົນທັງຫມົດຂອງພວກເຈົ້າ ແລະ ເຄື່ອງບູຊາດ້ວຍໃຈສະຫມັກຂອງພວກເຂົາທີ່ພວກເຈົ້າຖວາຍແດ່ພຣະຢາເວ.
[39]ໃນເລື່ອງກ່ຽວກັບເທດສະການຖ້ຳຢູ່ໄຟ, ໃນວັນທີສິບຫ້າຂອງເດືອນທີເຈັດ,
ເມື່ອພວກເຈົ້າໄດ້ຮວບຮວມພືດທີ່ໄດ້ມາຈາກແຜ່ນດິນນັ້ນແລ້ວພວກເຈົ້າຕ້ອງຮັກສາເທດສະການລ້ຽງນີ້ແດ່ພຣະຢາເວ, ສຳລັບເຈັດວັນ.
ໃນມື້ທຳອິດຈະເປັນມື້ພັກ, ແລະ ໃນວັນທີແປດກໍຈະເປັນມື້ພັກດ້ວຍ.
[40]ໃນມື້ທຳອິດພວກເຈົ້າຕ້ອງເອົາຜົນທີ່ດີທີ່ສຸດຈາກຕົ້ນມາ, ໃບຕານກ້ານຜ້າວກັບຫງ່າໄມ້ທີ່ມີໃບດົກ,
ແລະພວກເຈົ້າຈະຊື່ນຊົມຍິນດີຕໍ່ພະພັກພຣະຢາເວພຣະເຈົ້າຂອງພວກເຈົ້າເປັນເວລາເຈັດວັນ.
[41]ພວກເຈົ້າຕ້ອງສະຫລອງເທດສະການລ້ຽງນີ້ເປັນເວລາເຈັດວັນໃນແຕ່ລະປີ,
ນີ້ຈະເປັນກົດເກນຖາວອນຕະຫລອດຊົ່ວຊົນຊາດແລະພົງພັນຂອງພວກເຈົ້າ, ພວກເຈົ້າຕ້ອງສະຫລອງເທດສະການລ້ຽງນີ້ໃນເດືອນທີເຈັດ.
[42]ພວກເຈົ້າຕ້ອງອາໄສຢູ່ກອງໄຟນ້ອຍໆເປັນເວລາເຈັດວັນ, ຊາວອິດສະຣາເອນໂດຍກຳເນີດທຸກຄົນຕ້ອງຢູ່ໃນໄຟນ້ອຍໆ, ເປັນເວລາເຈັດວັນ.
[43]ເພື່ອເຊື້ອສາຍຂອງພວກເຈົ້າລຸ້ນຕໍ່ລຸ້ນຈະໄດ້ຮຽນຮູ້ວ່າ,
ເຮົາໄດ້ເຮັດໃຫ້ຄົນອິດສະຣາເອນອາໄສຢູ່ໃນໄຟພັກແບບນັ້ນຢ່າງໃດເມື່ອເຮົາໄດ້ນຳພວກເຂົາອອກຈາກແຜ່ນດິນເອຢິບ,
ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ."'[44]ດັ່ງນັ້ນແລະໂມເຊຈຶ່ງໄດ້ປະກາດໃຫ້ຄົນອິດສະຣາເອນຮູ້ເຖິງເທດສະການລ້ຽງທີ່ໄດ້ກຳນົດໄວ້ເພື່ອພຣະຢາເວ.

 generated on Tue Jun 17 19:01:42 2025

# 24

[1]ພຣະຢາເວໄດ້ກ່າວແກ່ໂມເຊວ່າ,
[2]"ຈົ່ງສັ່ງໃຫ້ຄົນອິດສະຣາເອນນຳນ້ຳມັນບໍລິສຸດທີ່ໄດ້ຄັ້ນຈາກຜົນຂອງຫມາກກອກເທດມາໃຫ້ແກ່ເຈົ້າເພື່ອໃຊ້ຕື່ມຕະກຽງ,
ເພື່ອໃຫ້ມີແສງສະຫວ່າງລຸກຢູ່ສະເຫມີ.

[3]ພາຍນອກຫນ້າຫີບແຫ່ງພັນທະສັນຍາທີ່ຢູ່ໃນເຕັນນັດພົບ, ອາໂຣນຕ້ອງຄອຍດູແລໃຫ້ຕະກຽງນີ້ມີໄຟລຸກຢູ່ສະເຫມີຕໍ່ພະພັກພຣະຢາເວ,
ຕັ້ງແຕ່ຕອນແລງຈົນຮອດເຊົ້າ, ນີ້ເປັນກົດເກນຖາວອນຕະຫລອດຊົ່ວຊົນຊາດພົງພັນຂອງເຈົ້າ.[4]ມະຫາປະໂຣຫິດຕ້ອງຄອຍຮັກສາຕະກຽງ,
ທີ່ຢູ່ເທິງຄັນຕະກຽງທອງຄຳບໍລິສຸດທີ່ມີໄຟລຸກຢູ່ສະເຫມີຕໍ່ພະພັກພຣະຢາເວ.
[5]ເຈົ້າຕ້ອງເອົາແປ້ງຢ່າງດີທີ່ອົບແລ້ວມາສິບສອງກ້ອນ, ແຕ່ລະກ້ອນຕ້ອງເຮັດຈາກແປ້ງ.[6]ແລ້ວເຈົ້າຕ້ອງວາງລຽງເປັນສອງແຖວ,
ແຖວລະຫົກກ້ອນເທິງໂຕະທອງຄຳບໍລິສຸດທີ່ຕໍ່ພະພັກພຣະຢາເວ.
[7]ເຈົ້າຕ້ອງໂຮຍເຄື່ອງຫອມບໍລິສຸດລະຫວ່າງແຕ່ລະແຖວຂອງຂະຫນົມປັງເຫລົ່ານັ້ນເພື່ອເປັນເຄື່ອງບູຊາທີ່ເປັນສ່ວນທີ່ແທນ,
ເຄື່ອງຫອມນີ້ຈະຖືກເຜົາແດ່ພຣະຢາເວ.[8]ທຸກມື້ສະບາໂຕ
ມະຫາປະໂຣຫິດຕ້ອງວາງຂະຫນົມປັງຫນ້າພະພັກພຣະຢາເວສະເຫມີໃນນາມຂອງຄົນອິດສະຣາເອນ,
ເປັນເຄື່ອງຫມາຍແຫ່ງພັນທະສັນຍານິລັນ.[9]ເຄື່ອງຖວາຍນີ້ຈະຕົກເປັນຂອງອາໂຣນ, ແລະບັນດາລູກຊາຍຂອງເຂົາ,
ແລະພວກເຂົາຈະກິນເຄື່ອງບູຊານັ້ນໃນສະຖານທີ່ບໍລິສຸດ, ເພາະນີ້ເປັນສ່ວນຫນຶ່ງຈາກການຖວາຍແດ່ພຣະຢາເວທີ່ຖວາຍດ້ວຍໄຟ.
[10]ບັດນີ້ ເກີດມີເລື່ອງວ່າລູກຊາຍຂອງຜູ້ຍິງອິດສະຣາເອນຄົນຫນຶ່ງ, ຊຶ່ງບິດາຂອງເຂົາເປັນຄົນເອຢິບ, ໄດ້ໄປໃນຖ່າມກາງຄົນອິດສະຣາເອນ,
ລູກຊາຍຄົນນີ້ເປັນລູກຂອງຜູ້ຍິງອິດສະຣາເອນໄດ້ຜິດກັບຊາຍອິດສະຣາເອນຄົນຫນຶ່ງໃນຄ້າຍ.
[11]ລູກຊາຍຂອງຍິງຄົນອິດສະຣາເອນນັ້ນຈຶ່ງໄດ້ຫມິ່ນປະຫມາດພຣະນາມຂອງພຣະຢາເວ. ແລະໄດ້ແຊ່ງດ່າພຣະເຈົ້າ,
ດັ່ງນັ້ນປະຊາຊົນຈຶ່ງໄດ້ພາເຂົາມາຫາໂມເຊ ແມ່ຂອງເຂົາຊື່ ເຊໂລມິດ, ລູກຜູ້ຍິງຂອງດິບຣີທີ່ມາຈາກເຜົ່າດານ.
[12]ພວກເຂົາໄດ້ຝັງຄົນນັ້ນໄວ້ຈົນກວ່າພຣະຢາເວຈະຊີ້ແຈ້ງປະສົງຂອງພຣະອົງເອງຕໍ່ພວກເຂົາ.
[13]ແລ້ວພຣະຢາເວໄດ້ຕັດສັ່ງແກ່ໂມເຊວ່າ,[14]"ຈົ່ງເອົາຊາຍຄົນນັ້ນທີ່ໄດ້ແຊ່ງດ່າພຣະເຈົ້າອອກໄປພາຍນອກຄ້າຍ,
ທຸກຄົນທີ່ໄດ້ຍິນຄຳດ່າຂອງເຂົາຕ້ອງວາງມືເທິງຫົວຜູ້ນັ້ນ, ຫລັງຈາກນັ້ນທີ່ຊຸມນຸມທັງຫມົດຈະຕ້ອງເອົາຫີນດຶກໃສ່ເຂົາໃຫ້ຕາຍ.
[15]ເຈົ້າຕ້ອງອະທິບາຍໃຫ້ແກ່ຄົນອິດສະຣາເອນວ່າ, "ຜູ້ໃດແຊ່ງດ່າພຣະເຈົ້າຂອງເຂົາຕ້ອງແບກຮັບຄວາມຜິດຂອງຕົນ.
[16]ໃຜທີ່ຫມິ່ນປະຫມາດພຣະຢາເວຕ້ອງໄດ້ຮັບໂທດເຖິງຕາຍຢ່າງແນ່ນອນ. ທີ່ຊຸມນຸມທັງຫມົດຕ້ອງເອົາຫີນດຶກໃສ່ເຂົາໃຫ້ຕາຍ,
ບໍ່ວ່າຄົນນັ້ນເປັນຄົນຕ່າງຊາດຫລືເປັນຄົນອິດສະຣາເອນໂດຍກຳເນີດ, ຖ້າຜູ້ໃດຫມິ່ນປະຫມາດພຣະນາມພຣະຢາເວ,
ເຂົາຕ້ອງໄດ້ຮັບໂທດເຖິງຕາຍ.
[17]ຖ້າໃຜຕີອີກຄົນຈົນຕາຍ, ເຂົາຕ້ອງຮັບໂທດເຖິງຕາຍຢ່າງແນ່ນອນ.[18]ຖ້າໃຜຕີສັດຂອງຄົນອື່ນຈົນຕາຍ, ເຂົາຕ້ອງຈ່າຍຊົດເຊີຍ ຊີວິດຕໍ່ຊີວິດ.
[19]ຖ້າຜູ້ໃດຕີເພື່ອນບ້ານຂອງເຂົາ ເຂົາຕ້ອງຖືກເຮັດເຊັ່ນດຽວກັນກັບທີ່ເຂົາໄດ້ເຮັດຕໍ່ເພື່ອນບ້ານຂອງເຂົາ:[20]ກະດູກຫັກຕໍ່ກະດູກຫັກຕາຕໍ່ຕາ,
ແຂ້ວຕໍ່ແຂ້ວ, ເຂົາໄດ້ເຮັດໃຫ້ຄົນອີກຜູ້ຫນຶ່ງເຈັບຢ່າງໃດ, ເຂົາຕ້ອງຖືກເຮັດແບບດຽວກັນ.[21]ຜູ້ໃດຂ້າສັດອີກໂຕຫນຶ່ງຕ້ອງຈ່າຍຄ່າຊົດໃຊ້,
ຜູ້ໃດຂ້າຄົນຕ້ອງຮັບໂທດເຖິງຕາຍ.
[22]ເຈົ້າຕ້ອງມີກົດຫມາຍຢ່າງດຽວກັນທັງກັບຄົນຕ່າງຊາດ ແລະຄົນອິດສະຣາເອນໂດຍກຳນົດດ້ວຍ,
ເພາະເຮົາຄືພຣະຢາເວພຣະເຈົ້າຂອງເຈົ້າ."'[23]ດັ່ງນັ້ນໂມເຊຈຶ່ງໄດ້ບອກແກ່ຄົນອິດສະຣາເອນ
ແລະປະຊາຊົນໄດ້ພາຊາຍຄົນນັ້ນທີ່ໄດ້ແຊ່ງດ່າພຣະຢາເວອອກໄປພາຍນອກຄ້າຍ. ພວກເຂົາຕ້ອງໄດ້ເອົາກ້ອນຫີນດຶກໃສ່ເຂົາໃຫ້ຕາຍ.
ຄົນອິດສະຣາເອນໄດ້ເຮັດຕາມພຣະບັນຊາຂອງພຣະຢາເວທີ່ມີມາຍັງໂມເຊ.

25 1ພຣະຢາເວໄດ້ກ່າວແກ່ໂມເຊເທິງພູເຂົາຊີນາຍວ່າ, 2"ຈົ່ງກ່າວແກ່ຄົນອິດສະຣາເອນແລະບອກພວກເຂົາວ່າ,
'ເມື່ອພວກເຈົ້າເຂົ້າສູ່ແຜ່ນດິນທີ່ ເຮົາປະທານໃຫ້ແກ່ພວກເຈົ້າ, ແຜ່ນດິນນັ້ນຕ້ອງຮັກສາວັນສະບາໂຕແດ່ພຣະຢາເວ.

3ພວກເຈົ້າຕ້ອງຫວ່ານໃນທົ່ງນາຂອງພວກເຈົ້າໃນຫົກປີ,
ແລະໃນຫົກປີນັ້ນພວກເຈົ້າຕ້ອງຕັດແຕ່ງສວນອະງຸ່ນຂອງພວກເຈົ້າແລະຮວບຮວມຜົນຜະລິດ. 4ແຕ່ໃນປີທີເຈັດ
ຕ້ອງຖືເປັນປີສະບາໂຕແຫ່ງການຢຸດພັກຂອງແຜ່ນດິນຢ່າງຈິງຈັງ ເປັນສະບາໂຕແດ່ພຣະຢາເວ
ພວກເຈົ້າຕ້ອງບໍ່ຫວ່ານໃນທົ່ງນາຂອງພວກເຈົ້າຫລືຕັດແຕ່ງສວນອະງຸ່ນຂອງພວກເຈົ້າ.
5ພວກເຈົ້າຕ້ອງບໍ່ເຮັດການເກັບກ່ຽວສິ່ງໃດທີ່ເຕີບໂຕຂຶ້ນເອງ ແລະພວກເຈົ້າຕ້ອງບໍ່ເຮັດການເກັບກ່ຽວອະງຸ່ນໃດໆ, ທີ່ເຕີບໃຫຍ່
ນີ້ຈະເປັນປີແຫ່ງການຫຍຸດພັກຂອງແຜ່ນດິນຢ່າງຈິງຈັງ.
6ສິ່ງໃດທີ່ເຕີບໂຕເທິງແຜ່ນດິນທີ່ບໍ່ໄດ້ເພາະປູກໃນຊ່ວງປີສະບາໂຕຈະເປັນອາຫານແກ່ພວກເຈົ້າ ທັງພວກເຈົ້າ ແລະທາດຊາຍຍິງຂອງພວກເຈົ້າ
ລູກຈ້າງຂອງພວກເຈົ້າ, ແລະຄົນຕ່າງດ້າວທີ່ອາໄສຢູ່ຖ່າມກາງພວກເຈົ້າຈະໄດ້ເກັບອາຫານ. 7ທັງຝູງສັດຂອງພວກເຈົ້າ,
ແລະສັດປ່າຈະໄດ້ກິນສິ່ງທີ່ເກີດຂຶ້ນເອງເທິງແຜ່ນດິນ.
8ພວກເຈົ້າຕ້ອງນັບປີສະບາໂຕເຈັດປີເຈັດຄັ້ງ, ນັ້ນຄືນັບເຈັດຄູນເຈັດປີ, ນັ້ນຈະເປັນເຈັດປີສະບາໂຕ, ລວມທັງຫມົດສີ່ສິບເກົ້າປີ.
9ແລ້ວພວກເຈົ້າຕ້ອງເປົ່າເຂົາສັດໃຫ້ດັງທົ່ວທຸກຫົນແຫ່ງໃນວັນທີສິບສອງເດືອນທີເຈັດ,
ໃນວັນແຫ່ງການລົບລ້າງມົນທິນນັ້ນພວກເຈົ້າຕ້ອງເປົ່າເຂົາສັດໃຫ້ທົ່ວທັງແຜ່ນດິນຂອງພວກເຈົ້າ.
10ພວກເຈົ້າຕ້ອງຕັ້ງປີທີຫ້າສິບໄວ້ແດ່ພຣະຢາເວ, ແລະປະກາດອິດສະລະພາບທົ່ວທັງແຜ່ນດິນແກ່ທຸກຄົນທີ່ອາໄສຢູ່ໃນນັ້ນ.
ນັ້ນຈະເປັນການສະເຫລີມສະຫລອງສຳຫລັບພວກເຈົ້າທີ່ດິນ, ແລະບັນດາທາດຕ້ອງກັບຄືນສູ່ຄອບຄອງພວກເຂົາ.
11ປີທີຫ້າສິບເປັນປີແຫ່ງການສະເຫລີມສະຫລອງສຳຫລັບພວກເຈົ້າ. ພວກເຈົ້າຕ້ອງບໍ່ຫວ່ານຫລືເຮັດການເກັບກ່ຽວ,
ຈົ່ງກິນທຸກສິ່ງທີ່ເຕີບໂຕຂຶ້ນເອງ, ແລະເກັບຜົນອະງຸ່ນນັ້ນ. 12ເພາະວ່ານີ້ເປັນປີແຫ່ງການສະເຫລີມສະຫລອງທີ່ບໍລິສຸດສຳຫລັບພວກເຈົ້າ.
ພວກເຈົ້າຕ້ອງກິນພືດທີ່ເຕີບໂຕຂຶ້ນເອງຕາມທົ່ງນາ.
13ພວກເຈົ້າຕ້ອງສົ່ງທຸກຄົນໃຫ້ກັບຄືນໄປຍັງທີ່ດິນຂອງພວກເຂົາເອງໃນປີແຫ່ງການສະເຫລີມສະຫລອງນີ້.
14ຖ້າພວກເຈົ້າຂາຍທີ່ດິນໃຫ້ແກ່ເພື່ອນບ້ານຂອງເຈົ້າ, ພວກເຈົ້າຕ້ອງບໍ່ໂກງຫລືເຮັດຜິດຕໍ່ກັນ.
15ຖ້າພວກເຈົ້າຊື້ທີ່ດິນຈາກເພື່ອນບ້ານຂອງເຈົ້າ, ໃຫ້ພິຈາລະນາຈຳນວນປີ. ແລະພືດຜົນທີ່ສາມາດເກັບກ່ຽວໄດ້
ໄປຈົນເຖິງປີແຫ່ງການສະເຫລີມສະຫລອງໃນຄັ້ງຕໍ່ໄປ, ເພື່ອນບ້ານຂອງພວກເຈົ້າທີ່ຂາຍທີ່ດິນກໍຕ້ອງພິຈາລະນາເຖິງເລື່ອງນັ້ນດ້ວຍເຊັ່ນກັນ.
16ຖ້າຈຳນວນປີທີ່ເຫລືອກ່ອນຈະເຖິງປີແຫ່ງການສະເຫລີມສະຫລອງຄົບຮອບໃນຄັ້ງຕໍ່ໄປເຫລືອນ້ອຍ, ລາຄາທີ່ດິນກໍນ້ອຍລົງ
ເພາະຈຳນວນຄັ້ງທີ່ເຈົ້າຂອງໃຫມ່ຈະເຮັດໃຫ້ຜົນເກັບກ່ຽວຈາກຜົນຜະລິດຈາກແຜ່ນດິນຈະຂຶ້ນຢູ່ກັບຈຳນວນປີທີ່ເຫລືອກ່ອນທີ່ຈະເຖິງປີແຫ່ງການສະເຫລີມສະຫລ
17ພວກເຈົ້າຕ້ອງບໍ່ໂກງກັນຫລືເຮັດຜິດຕໍ່ກັນ, ແຕ່ພວກເຈົ້າຕ້ອງຖວາຍກຽດແດ່ພຣະເຈົ້າຂອງພວກເຈົ້າ,
ເພາະເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ.
18ເພາະສະນັ້ນພວກເຈົ້າຕ້ອງເຊື່ອຟັງ, ເຮັດຕາມກົດເກນຂອງເຮົາ, ຈົ່ງຮັກສາກົດຫມາຍຂອບເຮົາ, ແລະເຮັດຕາມ
ແລ້ວພວກເຈົ້າຈະອາໄສຢູ່ໃນແຜ່ນດິນຢ່າງປອດໄພ. 19ແຜ່ນດິນຈະເກີດຜົນແລະພວກເຈົ້າຈະກິນອາຫານຈົນອີ່ມ, ແລະອາໄສຢູ່ຢ່າງປອດໄພ.
20ພວດເຈົ້າອາດເວົ້າວ່າ, "ແລ້ວພວກເຮົາຈະກິນອາຫານຫຍັງໃນປີທີເຈັດລະ? ເບິ່ງແມ,
ເຮົາບໍ່ສາມາດຫວ່ານຫລືລວມພືດຜົນຂອງເຮົາໄດ້." 21ເຮົາຈະບັນຊາພອນຂອງເຮົາມາເຫນືອພວກເຈົ້າໃນປີທີຫົກ
ແລະນັ້ນຈະເຮັດໃຫ້ເກັບກ່ຽວໄດ້ສຳລັບສາມປີ. 22ພວກເຈົ້າຈະຫວ່ານໃນປີທີແປດ,
ແລະຍັງຈະໄດ້ກິນຜົນຜະລິດຫລາຍປີກ່ອນຫນ້ານັ້ນຈາກຍສາງຈົນກວ່າຈະເຖິງການເກັບກ່ຽວໃນປີທີເກົ້າ,
ພວກເຈົ້າຍັງຈະສາມາດກິນອາຫານຈາກທີ່ເກັບສະສົມໄວ້ໃນຫລາຍປີກ່ອນຫນ້ານັ້ນ.
23ທີ່ດິນຕ້ອງບໍ່ຖືກຂາຍໃຫ້ແກ່ເຈົ້າຂອງໃຫມ່ຢ່າງຖາວອນ, ເພາະແຜ່ນດິນເປັນຂອງເຮົາດ ພວກເຈົ້າທັງປວງຕ່າງເປັນຄົນຕ່າງດ້າວ
ແລະອາໃສຢູ່ຊົ່ວຄາວໃນແຜ່ນດິນຂອງເຮົາ. 24ພວກເຈົ້າຕ້ອງບໍ່ມີສິດແຫ່ງການໄຖ່ຖອນສຳລັບທີ່ດິນທັງຫມົດທີ່ພວກເຈົ້າຖືຄອງຢູ່,
ພວກເຈົ້າຕ້ອງຍອມໃຫ້ຄອບຄົວຈາກເຂົາໄດ້ຊື້ທີ່ດິນຄືນ. 25ຖ້າພີ່ນ້ອງຄົນອິດສະຣາເອນຂອງເຈົ້າທຸກຍາກລົງ,
ເພາະເຫດນັ້ນຈຶ່ງໄດ້ຂາຍທີ່ດິນບາງສ່ວນໃຫ້ເຂົາ, ຫລັງຈາກນັ້ນພີ່ນ້ອງໃກ້ຊິດຂອງເຂົາສາມາດຊື້ທີ່ດິນທີ່ເຂົາໄດ້ຂາຍໃຫ້ແກ່ເຈົ້າຄືນກັບໄປໄດ້.
26ຖ້າຊາຍຄົນນັ້ນບໍ່ມີຍາດມາໄຖ່ຖອນທີ່ດິນຂອງເຂົາ, ແຕ່ເຂົາລໍ້າລວຍຂຶ້ນ ແລະມີຄວາມສາມາດໄຖ່ຖອນຄືນໄດ້.
27ກໍໃຫ້ເຂົາຄຳນວນຍ້ອນໄປເຖິງປີທີ່ພວກເຂົາຖືກຂາຍໄປ, ແລະຈ່າຍຄືນໃຫ້ຄົນທີ່ຊື້ໄປນັ້ນ ແລ້ວເຂົາຈຶ່ງສາມາດກັບໄປທີ່ດິນຂອງເຂົາໄດ້.
28ແຕ່ຖ້າເຂົາບໍ່ສາມາດໄຖ່ຖອນທີ່ດິນກັບມາໄດ້,
ທີ່ດິນຂອງເຂົາທີ່ຂາຍໄປນັ້ນກໍຍັງເປັນຂອງຄົນທີ່ຊື້ໄປຈົນກວ່າຈະເຖິງປີແຫ່ງການສະເຫລີມສະຫລອງ,
ເມື່ອເຖິງປີແຫ່ງການສະເຫລີມສະຫລອງ, ທີ່ດິນທີ່ຈະຖືກຄືນໄປໃຫ້ແກ່ຄົນທີ່ຂາຍໄປ, ແລະເຈົ້າຂອງເດີມກໍຈະກັບໄປຢູ່ທີ່ດິນຂອງຕົນເອງໄດ້.
29ຖ້າຊາຍຄົນໃດຂາຍເຮືອນທີ່ມີກຳແພງ,
ເຂົາກໍສາມາດຊື້ຄືນໄດ້ພາຍໃນຫນຶ່ງປີຫລັງຈາກທີ່ໄດ້ຂາຍເຮືອນໄປແລ້ວເຂົາມີສິດໄຖ່ຖອນໄດ້ຕະຫລອດຫນຶ່ງປີ.
30ຖ້າເຮືອນນັ້ນບໍ່ຖືກໄຖ່ຖອນພາຍໃນຫນຶ່ງປີ
ເຮືອນທີ່ຢູ່ໃນເມືອງທີ່ມີກຳແພງນັ້ນກໍຈະເປັນຊັບສິນຂອງຊາຍຜູ້ນັ້ນໄດ້ຊື້ບ້ານນັ້ນໄປຕະຫລອດຊົ່ວຊົນຊາດຂອງເຂົາ,
ເຮືອນຫລັງນັ້ນຈະບໍ່ຕ້ອງຄືນໃນປີແຫ່ງການສະເຫລີມສະຫລອງ.
31ແຕ່ບັນດາເຮືອນຕາມຫມູ່ບ້ານທີ່ບໍ່ມີກຳແພງລ້ອມຮອບຈະຖືວ່າເປັນເຫມືອນທີ່ດິນທົ່ງນາ, ເປັນດິນທີ່ສາມາດໄຖ່ຖອນໄດ້,
ແລະທີ່ດິນນັ້ນຈະຖືກສົ່ງຄືນໃນປີແຫ່ງການສະເຫລີມສະຫລອງ. 32ແຕ່ຢ່າງໃດກໍຕາມ, ບັນດາເຮືອນຂອງຄົນທີ່ເປັນຄົນເລວີທີ່ຢູ່ເມືອງຕ່າງໆ
ຂອງພວກເຂົາສາມາດໄຖ່ຖອນໄດ້ທຸກເວລາ.

 generated on Tue Jun 17 19:01:42 2025

[33]ຖ້າຄົນເລວີຄົນຫນຶ່ງໄດ້ໄຖ່ຖອນບ້ານທີ່ເຂົາໄດ້ຂາຍໄປ, ບ້ານໃນເມືອງທີ່ຖືກຂາຍໄປນັ້ນ, ຈະຕ້ອງສົ່ງຄືນໃນປີແຫ່ງການສະເຫລີມສະຫລອງ,
ເພາະບັນດາບ້ານໃນເມືອງຂອງຄົນເລວີນັ້ນເປັນຊັບສິນຂອງພວກເຂົາໃນຖ່າມກາງຄົນອິດສະຣາເອນ.
[34]ແຕ່ທົ່ງນາທີ່ລ້ອມເມືອງຂອງພວກເຂົາຈະຂາຍບໍ່ໄດ້ເພາະທົ່ງນາເຫລົ່ານັ້ນເປັນຊັບສິນຖາວອນຂອງຄົນເລວີ.
[35]ຖ້າພີ່ນ້ອງຮ່ວມຊາດຂອງພວກເຈົ້າທຸກຍາກລົງ ຈົນເຂົາບໍ່ສາມາດລ້ຽງດູຕົນເອງໄດ້ຕໍ່ໄປ,
ພວກເຈົ້າກໍ່ຕ້ອງຊ່ວຍເຂົາເຫມືອນກັບພວກເຈົ້າໄດ້ຊ່ວຍຄົນຕ່າງດ້າວຫລືຄົນອື່ນໆ. ທີ່ໄດ້ອາໃສຄືແຂກເມືອງໃນຖ່າມກາງພວກເຈົ້າ.
[36]ຢ່າຄິດດອກເບ້ຍຫລືພະຍາຍາມຫາກຳໄລໃດໆ ຈາກເຂົາ,
ແຕ່ຈົ່ງຖວາຍກຽດແດ່ພຣະເຈົ້າເພື່ອພີ່ນ້ອງຂອງພວກເຈົ້າຈະໄດ້ຢູ່ຮ່ວມກັບພວກເຈົ້າ.[37]ພວກເຈົ້າຕ້ອງບໍ່ໃຫ້ເຂົາກູ້ເງິນຫລືຄິດດອກເບ້ຍ,
ຫລືຂາຍອາຫານໃຫ້ເຂົາໂດຍຄິດກຳໄລ.[38]ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ, ຜູ້ໃດນຳພວກເຈົ້າອອກຈາກແຜ່ນດິນເອຢິບ,
ເພື່ອເຮົາຈະໄດ້ແຍກແຜ່ນດິນຄານາອັນໃຫ້ແກ່ພວກເຈົ້າ, ແລະເພື່ອຈະໄດ້ເປັນພຣະເຈົ້າຂອງພວກເຈົ້າ.
[39]ຖ້າພີ່ນ້ອງຮ່ວມຊາດຂອງພວກເຈົ້າທຸກຍາກລົງ ແລະຂາຍຕົວເຂົາເອງສຳຫລັບພວກເຈົ້າ, ພວກເຈົ້າຕ້ອງບໍ່ບັງຄັບໃຫ້ເຂົາເຮັດວຽກຄືທາດ.
[40]ຈົ່ງປະຕິບັດຕໍ່ເຂົາເຫມືອນລູກຈ້າງ, ເຂົາຕ້ອງເປັນຄືຄົນທີ່ເຄີຍອາໄສຢູ່ກັບເຈົ້າຊົ່ວຄາວ,
ເຂົາຈະຮັບໃຊ້ພວກເຂົາຈົນເຖິງປີແຫ່ງການສະເຫລີມສະຫລອງ.[41]ຫລັງຈາກນັ້ນເຂົາຈະຈາກເຈົ້າໄປ, ທັງໂຕເຂົາແລະລູກທີ່ຢູ່ກັບເຂົາ,
ແລະເຂົາຈະກັບໄປຍັງຄອບຄົວຂອງເຂົາ, ແລະໄປຍັງທີ່ດິນຂອງບິດາເຂົາ.
[42]ເພາະພວກເຂົາເປັນຜູ້ຮັບໃຊ້ຂອງພວກເຮົາຜູ້ຊຶ່ງເຮົາໄດ້ນຳເຂົາອອກມາຈາກແຜ່ນດິນເອຢິບ, ພວກເຂົາຈະບໍ່ຖືກຂາຍໃຫ້ເປັນທາດ.
[43]ພວກເຈົ້າຕ້ອງປົກຄອງພວກເຂົາຢ່າງທາລຸນ, ແຕ່ພວກເຈົ້າຕ້ອງຖວາຍກຽດແດ່ພຣະຢາເວພຣະເຈົ້າຂອງພວກເຈົ້າ.
[44]ສ່ວນເລື່ອງທາດຊາຍຍິງຂອງພວກເຈົ້າທີ່ພວກເຈົ້າໄດ້ມາຈາກຊົນຊາດຕ່າງໆ, ທີ່ອາໄສຢູ່ລ້ອມຮອບພວກເຈົ້າ,
ພວກເຈົ້າສາມາດຊື້ທາດຈາກພວກເຂົາໄດ້.
[45]ພວກເຈົ້າສາມາດຊື້ທາດຈາກຄົນຕ່າງດ້າວທີ່ອາໄສຢູ່ຖ່າມກາງພວກເຈົ້າ, ຊຶ່ງມາຈາກຄອບຄົວຂອງພວກເຂົາທີ່ຢູ່ກັບເຈົ້າ,
ບັນດາເດັກນ້ອຍທີ່ເກີດໃນແຜ່ນດິນຂອງພວກເຈົ້າ, ພວກເຂົາທັງຫລາຍເປັນຊັບສິນຂອງພວກເຈົ້າໄດ້.
[46]ພວກເຈົ້າສາມາດຍົກທາດເຫລົ່ານັ້ນເປັນມໍລະດົກແກ່ລູກຫລານຂອງພວກເຈົ້າຕໍ່ໄປໄດ້ເຫມືອນດັ່ງເປັນຊັບສິນ,
ພວກເຈົ້າສາມາດຊື້ທາດຂອງພວກເຈົ້າຈາກພວກເຂົາໄດ້ທຸກເມື່ອ,
ແຕ່ພວກເຈົ້າຕ້ອງບໍ່ປົກຄອງເຫນືອພີ່ນ້ອງຂອງພວກເຈົ້າຈາກຖ່າມກາງຄົນອິດສະຣາເອນດ້ວຍຄວາມຮຸນແຮງ.
[47]ຖ້າຄົນຕ່າງດ້າວຫລືພວກທີ່ອາໄສກັບເຈົ້າລໍ່າລວຍຂຶ້ນ, ແລະຖ້າພີ່ນ້ອງຄົນອິດສະຣາເອນຈັກຄົນຫນຶ່ງຂອງພວກເຈົ້າທຸກຍາກລົງ
ແລະຂາຍໂຕເອງໃຫ້ຄົນຕ່າງດ້າວຄົນນັ້ນຫລືບາງຄົນໃນຄອບຄົວຂອງຄົນຕ່າງດ້າວນັ້ນ.
[48]ຫລັງຈາກພວກພີ່ນ້ອງຄົນອິດສະຣາເອນຂອງພວກເຈົ້າຖືກຊື້ໄປ, ເຂົາສາມາດຖືກຊື້ຄືນໄດ້,
ບາງຄົນໃນຄອບຄົວຂອງເຂົາສາມາດໄຖ່ຖອນເຂົາໄດ້.
[49]ອາດເປັນລຸງຂອງຄົນນັ້ນ, ຫລືລູກອ້າຍລູກນ້ອງຂອງເຂົາທີ່ຈະໄຖ່ຖອນເຂົາດ ຫລືຄົນໃດທີ່ເປັນພີ່ນ້ອງໃກ້ຊິດຂອງເຂົາຈາກຄອບຄົວຂອງເຂົາ,
ຫລືຖ້າເຂົາລໍ່າລວຍຂຶ້ນ, ເຂົາອາດໄຖ່ຖອນໂຕເອງໄດ້.[50]ເຂົາຕ້ອງຕໍ່ລອງກັບຄົນທີ່ຊື້ເຂົາໄປ,
ພວກເຂົາຕ້ອງນັບຈຳນວນປີທີ່ເຂົາຂາຍໂຕເອງໃຫ້ແກ່ຜູ້ຊື້ໄປຈົນເຖິງປີແຫ່ງການສະເຫລີມສະຫລອງ.
ຄ່າໄຖ່ຖອນຂອງເຂົາຕ້ອງຄິດຕາມອັດຕາທີ່ຈ່າຍໃຫ້ແກ່ລູກຈ້າງ, ຕາມຈຳນວນປີທີ່ເຫລືອທີ່ເຂົາສາມາດເຮັດວຽກໃຫ້ແກ່ຜູ້ທີ່ໄດ້ຊື້ເຂົາໄປ.
[51]ຖ້າຍັງມີເຫລືອຢູ່ຫລາຍປີກວ່າຈະເຖິງປີແຫ່ງການສະເຫລີມສະຫລອງ, ເຂົາຕ້ອງຈ່າຍຄ່າໄຖ່ຖອນໂຕເອງຄືນຕາມຈຳນວນປີທີ່ເຫລືອນັ້ນ.
[52]ຖ້າເຫລືອບໍ່ຮອດປີກ່ອນທີ່ຈະເຖິງປີແຫ່ງການສະເຫລີມສະຫລອງ, ກໍ່ໃຫ້ຜູ້ຂາຍຄິດໄລ່ຈຳນວນປີທີ່ເຫລືອ,
ແລະເຂົາຈະຕ້ອງຈ່າຍຄ່າໄຖ່ຖອນຕົນເອງຕາມຈຳນວນປີທີ່ເຫລືອນັ້ນ.
[53]ເຂົາຕ້ອງໄດ້ຮັບການປະຕິບັດຄືລູກຈ້າງປີຕໍ່ໄປ. ພວກເຈົ້າຕ້ອງບໍ່ປະຕິບັດຕໍ່ພວກເຂົາດ້ວຍຄວາມທາລຸນ.
[54]ຖ້າເຂົາບໍ່ໄດ້ໄຖ່ຖອນຕາມທີ່ບໍ່ໄດ້ກ່າວມາແລ້ວ, ເຂົາກໍ່ຕ້ອງຮັບໃຊ້ຈົນເຖິງປີແຫ່ງການສະເຫລີມສະຫລອງ. ທັງໂຕເຂົາແລະລູກ
ຂອງເຂົາທີ່ຢູ່ກັບເຂົາ.[55]ສຳຫລັບເຮົາແລ້ວ, ຄົນອິດສະຣາເອນຕ່າງເປັນຜູ້ຮັບໃຊ້ຂອງເຮົາຜູ້ຊຶ່ງເຮົາໄດ້ນຳອອກຈາກແຜ່ນດິນອີຢິບ.
ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ.


generated on Tue Jun 17 19:01:42 2025

## 26

[1]ພວກເຈົ້າຕ້ອງບໍ່ເຮັດຮູບເຄົາລົບ, ພວກເຈົ້າຕ້ອງບໍ່ຕັ້ງຮູບແກະສະຫລັກຫລືເສົາຫີນສັກສິດ, ແລະພວກເຈົ້າຕ້ອງບໍ່ຕັ້ງຮູບຫີນແກະສະຫລັກໃດໆ,
ໃນແຜ່ນດິນຂອງພວກເຈົ້າເພື່ອທີ່ພວກເຈົ້າຈະຂາບໄຫວ້, ເພາະເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ.
[2]ພວກເຈົ້າຕ້ອງຖືວັນສະບາໂຕທັງຫລາຍຂອງເຮົາແລະໃຫ້ກຽດສະຖານນະມັດສະການຂອງເຮົາເຮົາຄືພຣະຢາເວ.

[3]ຖ້າພວກເຈົ້າດຳເນີນຢູ່ໃນກົດຫມາຍຂອງເຮົາແລະຮັກສາບັນຍັດຕ່າງໆ ຂອງເຮົາແລະເຮັດຕາມນັ້ນ,
[4]ເຮົາກໍຈະປະທານຝົນຕາມລະດູການຂອງມັນ, ແລະຕົ້ນໄມ້ຕ່າງໆ ໃນທົ່ງທີ່ງຈະເກີດພືດຜົນຂອງມັນ.
[5]ການນວດເຂົ້າຂອງພວກເຈົ້າຈະຍາວໄປຈົນເຖິງເວລາເກັບກ່ຽວຜົນອະງຸ່ນ, ແລະການເກັບກ່ຽວຜົນອະງຸ່ນດົນນານຈົນເຖິງລະດູຫວ່ານ,
ພວກເຈົ້າຈະກິນອາຫານຂອງພວກເຈົ້າຈົນອີ່ມແລະຢູ່ຢ່າງປອດໄພໃນບໍລິເວນທີ່ພວກເຈົ້າສ້າງທີ່ອາໃສຂອງພວກເຈົ້າໃນແຜ່ນດິນນັ້ນ.
[6]ເຮົາຈະໃຫ້ເກີດຄວາມສະຫງົບສຸກໃຫ້ແຜ່ນດິນ,
ພວກເຈົ້າຈະນອນລົງໂດຍບໍ່ມີໃຜມາເຮັດໃຫ້ພວກເຈົ້າຢ້ານໄດ້ເຮົາຈະເອົາບັນດາສັດຮ້າຍທັງຫລາຍອອກຈາກແຜ່ນດິນຂອງພວກເຈົ້າ.
[7]ພວກເຈົ້າຈະໄລ່ຕິດຕາມສັດຕູຂອງພວກເຈົ້າແລະພວກເຈົ້າຈະລົ້ມລົງດ້ວຍດາບຕໍ່ຫນ້າພວກເຈົ້າ.[8]ພວກເຈົ້າຫ້າຄົນຈະໄລ່ໄດ້ຫນຶ່ງຮ້ອຍຄົນ,
ແລະພວກເຈົ້າຮ້ອຍຄົນຈະໄລ່ໄດ້ຫນຶ່ງຫມື່ນຄົນ; ສັດຕູທັງຫລາຍຂອງພວກເຈົ້າຈະລົ້ມລົງດ້ວຍດາບຕໍ່ຫນ້າຕໍ່ຕາພວກເຈົ້າ.
[9]ເຮົາຈະເບິ່ງພວກເຈົ້າດ້ວຍຄວາມຊື່ນຊົມແລະເຮັດໃຫ້ພວກເຈົ້າເກີດຜົນແລະເຮັດໃຫ້ພວກເຈົ້າທະວີຂຶ້ນ;
ເຮົາຈະເຮັດພັນທະສັນຍາຂອງເຮົາກັບເຈົ້າ.[10]ພວກເຈົ້າຈະກິນອາຫານທີ່ເກັບສະສົມໄວ້ເປັນເວລາດົນນານ,
ພວກເຈົ້າຈະເອົາອາຫານທີ່ເກັບໄວ້ອອກໄປເພາະພວກເຈົ້າຈະຕ້ອງການພື້ນທີ່ສຳຫລັບການເກັບກ່ຽວໃຫມ່.
[11]ເຮົາຈະສະຖິດຢູ່ຫໍເຕັນຂອງເຮົາໃນທ່າມກາງພວກເຈົ້າ, ແລະເຮົາຈະບໍ່ກຽດຊັງພວກເຈົ້າ.
[12]ເຮົາຈະເດີນໄປຖ່າມກາງພວກເຈົ້າແລະເປັນພຣະເຈົ້າຂອງພວກເຈົ້າ, ແລະພວກເຈົ້າຈະເປັນປະຊາກອນຂອງເຮົາ.
[13]ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ. ຜູ້ໄດ້ນຳພວກເຈົ້າອອກມາຈາກແຜ່ນດິນເອຢິບ,
ເພື່ອພວກເຈົ້າຈະບໍ່ໄດ້ເປັນທາດຂອງພວກເຂົາເຮົາໄດ້ຫັກໄມ້ແຫ່ງແອກຂອງພວກເຈົ້າ ແລະຊ່ວຍໃຫ້ພວກເຈົ້າເດີນຕົງໄດ້.
[14]ແຕ່ຖ້າພວກເຈົ້າບໍ່ຟັງເຮົາ, ແລະຈະບໍ່ເຮັດຕາມບັນຍັດທັງປວງນີ້.[15]ແລະຖ້າພວກເຈົ້າປະຕິເສດກົດເກນຂອງເຮົາ,
ແລະກຽດຊັງກົດຫມາຍຂອງເຮົາ. ພວກເຈົ້າຈຶ່ງບໍ່ເຮັດຕາມບັນຍັດທັງປວງຂອງເຮົາ, ແຕ່ທຳລາຍພັນທະສັນຍາຂອງເຮົາ.
[16]ຖ້າພວກເຈົ້າເຮັດດັ່ງນັ້ນ, ເຮົາກໍຈະເຮັດດັ່ງຕໍ່ໄປນີ້ແກ່ພວກເຈົ້າ, ເຮົາຈະນຳສິ່ງທີ່ຫນ້າຢ້ານມາຫາພວກເຈົ້າ, ໂຣກຕ່າງໆ ແລະ
ຄວາມເຈັບໄຂ້ທີ່ຈະທຳລາຍດວງຕາທັງຫລາຍ, ແລະພວກເຈົ້າຫວ່ານເມັດໂດຍເປົ່າປະໂຫຍດ,
ເພາະສັດຕູຂອງພວກເຈົ້າຈະກິນພືດຜົນຂອງພວກເຈົ້າ.[17]ເຮົາຈະຕັ້ງຫນ້າຕໍ່ສູ້ພວກເຈົ້າ, ແລະພວກເຈົ້າຈະຖືກປົກຄອງໂດຍສັດຕູຂອງພວກເຈົ້າ,
ຄົນທັງຫລາຍທີ່ເຈົ້າກຽດຊັງຈະປົກຄອງເຫນືອພວກເຈົ້າ, ແລະ ພວກເຈົ້າຈະແລ່ນຫນີເຖິງວ່າບໍ່ມີໃຜໄລ່ຕາມພວກເຈົ້າ.
[18]ຖ້າພວກເຈົ້າບໍ່ຟັງບັນຍັດຕ່າງໆ ຂອງເຮົາ, ເຮົາກໍຈະລົງໂທດພວກເຈົ້າເຈັດເທົ່າຢ່າງຮຸນແຮງສຳຫລັບຄວາມບາບທັງຫລາຍຂອງພວກເຈົ້າ.
[19]ເຮົາຈະທຳລາຍຄວາມຖືດີງຈອງຫອງຂອງພວກເຈົ້າ,
ເຮົາຈະເຮັດໃຫ້ທ້ອງຟ້າເຫນືອພວກເຈົ້າເປັນເຫມືອນເຫລັກແລະແຜ່ນດິນຂອງເຈົ້າເປັນເຫມືອນທອງສຳລິດ.
[20]ກຳລັງຂອງພວກເຈົ້າຖືກໃຊ້ຢ່າງໄຮ້ປະໂຫຍດ, ເພາະແຜ່ນດິນຂອງພວກເຈົ້າຈະບໍ່ເກີດຜົນໃຫ້ເກັບກ່ຽວ,
ແລະຕົ້ນໄມ້ທັງຫລາຍໃນແຜ່ນດິນຂອງພວກເຈົ້າຈະບໍ່ອອກຜົນຂອງມັນ.
[21]ຖ້າພວກເຈົ້າບໍ່ດຳເນີນຕໍ່ຫນ້າເຮົາແລະບໍ່ຟັງເຮົາ,
ເຮົາຈະນຳຄວາມຈິບຫາຍມາຍັງພວກເຈົ້າເຈັດເທົ່າຂອງຂະຫນາດບາບທັງຫລາຍຂອງພວກເຈົ້າ.
[22]ເຮົາຈະສົ່ງສັດຮ້າຍທັງຫລາຍມາຕໍ່ສູ້ພວກເຈົ້າ, ຊຶ່ງຈະມາລັກລູກຫລານຂອງພວກເຈົ້າ, ແລະເຮັດໃຫ້ພວກເຈົ້າເຫລືອຢູ່ຈຳນວນນ້ອຍ,
ຫົນທາງຂອງພວກເຈົ້າກໍຈະກາຍເປັນທີ່ຮ້າງເປົ່າ.
[23]ແມ້ຈະພົບກັບສິ່ງນີ້ແລ້ວ, ພວກເຈົ້າຍັງບໍ່ຍອມຮັບການສັ່ງສອນຂອງເຮົາແລະພວກເຈົ້າຍັງຄົງດຳເນີນຕໍ່ຕ້ານເຮົາ.
[24]ເຮົາກໍຈະດຳເນີນຕໍ່ຕ້ານພວກເຈົ້າດ້ວຍ, ແລະເຮົາເອງຈະລົງໂທດພວກເຈົ້າເຈັດເທົ່າເພາະຄວາມບາບທັງຫລາຍຂອງພວກເຈົ້າ.
[25]ເຮົາຈະນຳດາບມາຍັງພວກເຈົ້າທີ່ຈະເຮັດການແກ້ແຄ້ນເພາະການຝ່າຝືນພັນທະສັນຍາ, ພວກເຈົ້າຈະລວມໂຕກັນຢູ່ໃນເມືອງຕ່າງໆ
ແລະເຮົາຈະສົ່ງໂຣກມາຍັງທ່າມກາງພວກເຈົ້າໃນທີ່ນັ້ນ. ແລ້ວພວກເຈົ້າຈະຖືກມອບໄວ້ໃນມືຂອງສັດຕູຂອງພວກເຈົ້າ.
[26]ເມື່ອເຖິງຕອນທີ່ເຮົາຕັດແຫລ່ງອາຫານຂອງພວກເຈົ້າ, ຜູ້ຍິງສິບຄົນຈະສາມາດອົບຂະຫນົມປັງໂດຍໃຊ້ເຕົາອົບເຕົາດຽວ, ແລະ
ພວກເຈົ້າຈະແບ່ງເຂົ້າຈີ່ຂອງພວກເຈົ້າໂດຍການຊັ່ງ, ພວກເຈົ້າຈະກິນແຕ່ບໍ່ອີ່ມ.
[27]ຖ້າພວກເຈົ້າບໍ່ຟັງເຮົາໃນເລື່ອງເຫລົ່ານີ້ແຕ່ຍັງຄົງດຳເນີນຕໍ່ຕ້ານເຮົາ.[28]ແລ້ວເຮົາກໍຈະດຳເນີນການຕໍ່ຕ້ານພວກເຈົ້າດ້ວຍຄວາມໂກດຮ້າຍ,
ແລະເຮົາຈະລົງໂທດພວກເຈົ້າໃຫ້ຫລາຍກວ່າຄວາມບາບທັງຫລາຍຂອງພວກເຈົ້າເຈັດເທົ່າ.
[29]ພວກເຈົ້າຈະກິນຊີ້ນຂອງລູກຊາຍຂອງພວກເຈົ້າ, ພວກເຈົ້າຈະກິນລູກສາວຂອງພວກເຈົ້າ.
[30]ເຮົາຈະທຳລາຍສະຖານທີ່ນະມັດສະການຂອງພວກເຈົ້າຢູ່ເທິງພູ, ແລະຕັດແທ່ນເຄື່ອງຫອມຂອງພວກເຈົ້າລົງ,
ແລະໂຍນສົບຂອງພວກເຈົ້າເທິງຊາກຮູບເຄົາລົບທັງຫລາຍຂອງພວກເຈົ້າ ແລະເຮົາຈະຊັງພວກເຈົ້າ.
[31]ເຮົາຈະປ່ຽນເມືອງຂອງພວກເຈົ້າໃຫ້ກາຍເປັນຊາກແຕກຫັກ, ແລະທຳລາຍສະຖານທີ່ນະມັດສະການຂອງພວກເຈົ້າ,
ເຮົາຈະບໍ່ພໍໃຈກິ່ນຫອມແຫ່ງເຄື່ອງບູຊາຂອງພວກເຈົ້າ.[32]ເຮົາຈະເຮັດໃຫ້ແຜ່ນດິນຮ້າງເປົ່າ,
ສັດຕູຂອງພວກເຈົ້າຜູ້ອາໄສຢູ່ທີ່ນັ້ນຈະຕົກໃຈກັບຄວາມຮ້າງເປົ່ານັ້ນ.[33]ເຮົາຈະໃຫ້ພວກເຈົ້າກະຈັດກະຈາຍໄປຖ່າມກາງຊົນຊາດຕ່າງໆ,
ແລະເຮົາຈະຊັກດາບຂອງເຈົ້າອອກແລະໄລ່ຕາມພວກເຈົ້າ, ແຜ່ນດິນຂອງພວກເຈົ້າຈະຖືກຖິ້ມຮ້າງໄວ້,
ແລະເມືອງຕ່າງໆຂອງພວກເຈົ້າຈະກາຍເປັນຊາກປັກຫັກພັງ.

[34]ແລ້ວແຜ່ນດິນນັ້ນຈະຍິນດີໃນວັນສະບາໂຕຂອງແຜ່ນດິນດົນທີ່ແຜ່ນດິນນັ້ນວ່າງເປົ່າ, ແລະພວກເຈົ້າກໍຢູ່ໃນແຜ່ນດິນຂອງສັດຕູທັງຫລາຍ,
ໃນຊ່ວງເວລານັ້ນແຜ່ນດິນກໍຈະຢຸດພັກແລະຍິນດີໃນວັນສະບາໂຕຂອງແຜ່ນດິນນັ້ນ.[35]ນານເທົ່າແຜ່ນດິນນັ້ນວ່າງເປົ່າ
ແຜ່ນດິນກໍຈະຢຸດພັກຊຶ່ງເປັນການຢຸດພັກທີ່ແຜ່ນດິນນັ້ນບໍ່ເຄີຍມີໃນວັນສະບາໂຕທັງຫລາຍຂອງພວກເຈົ້າ,
ເມື່ອພວກເຈົ້າອາໄສຢູ່ໃນແຜ່ນດິນນັ້ນ.[36]ສຳຫລັບບັນດາພວກເຈົ້າທີ່ເຫລືອຢູ່ໃນແຜ່ນດິນຂອງສັດຕູທັງຫລາຍຂອງພວກເຈົ້າ,
ເຮົາຈະສົ່ງຄວາມຢ້ານກົວເຂົ້າມາຍັງຈິດໃຈຂອງພວກເຈົ້າດັ່ງນັ້ນແມ້ແຕ່ສຽງໃບໄມ້ປິວຕາມລົມກໍເຮັດໃຫ້ພວກເຈົ້າສະດຸ້ງ,
ແລະພວກເຈົ້າຈະຫນີເຫມືອນດັ່ງພວກເຈົ້າກຳລັງຫນີດາບ.
[37]ພວກເຈົ້າຈະລົ້ມລົງແມ້ບໍ່ມີໃຜໄລ່ຕາມພວກເຈົ້າ, ພວກເຈົ້າຈະສະດຸດຊຶ່ງກັນ, ແລະກັນເຫມືອນກັບພວກເຈົ້າກຳລັງແລ່ນຫນີດາບ
ແມ້ບໍ່ມີໃຜໄລ່ຕາມພວກເຈົ້າພວກເຈົ້າກໍຈະບໍ່ມີກຳລັງທີ່ຈະຢືນຢູ່ຕໍ່ຫນ້າສັດຕູທັງຫລາຍຂອງພວກເຈົ້າ.
[38]ພວກເຈົ້າຈະຈິບຫາຍໄປຖ່າມກາງປະຊາຊາດ, ແລະແຜ່ນດິນທັງຫລາຍສັດຕູຂອງພວກເຈົ້າ.[39]ບັນດາພວກທີ່ເຫລືອຢູ່ໃນທ່າມກາງພວກເຈົ້າ,
ຈະຕົກຕໍ່າລົງໃນນຄວາມບາບທັງຫລາຍຂອງພວກເຂົາ, ເມື່ອຢູ່ໃນແຜ່ນດິນຂອງສັດຕູທັງຫລາຍຂອງພວກເຈົ້າ,
ແລະເພາະຄວາມບາບຂອງບັນພະບູຫລຸດຂອງພວກເຈົ້າພວກເຈົ້າຈະຊຸດໂຊມໄປດ້ວຍ.
[40]ແຕ່ຖ້າພວກເຈົ້າສາລະພາບບາບຂອງພວກເຂົາ, ແລະຄວາມບາບຂອງບັນພະບູລຸດຂອງພວກເຈົ້າ,
ແລະການທໍລະຍົດຂອງພວກເຈົ້າທີ່ພວກເຂົາບໍ່ຊື່ສັດຕໍ່ເຮົາ, ແລະການທີ່ພວກເຂົາໄດ້ດຳເນີນການຕໍ່ເຮົາດ້ວຍ.
[41]ຊຶ່ງເຮັດໃຫ້ພວກເຮົາຫັນໄປຕໍ່ຕ້ານພວກເຂົາ,
ແລະເຮົາໄດ້ນຳພວກເຂົາໄປສູ່ແຜ່ນດິນຂອງສັດຕູທັງຫລາຍຂອງພວກເຂົາຖ້າຈິດໃຈທີ່ບໍ່ໄດ້ຖ່ອມໂຕລົງ,
ແລະຖ້າພວກເຂົາຍອມຮັບການລົງໂທດສຳຫລັບການບາບທັງຫລາຍຂອງພວກເຂົາ.[42]ແລ້ວເຮົາກໍຈະລະນຶກເຖິງສັນຍາຂອງເຮົາກັບຢາໂຄບ,
ພັນທະສັນຍາຂອງເຮົາກັບອິຊາກ, ແລະພັນທະສັນຍາຂອງເຮົາກັບອັບຣາຮາມ, ແລະເຮົາຈະລະນຶກເຖິງແຜ່ນດິນນັ້ນ.
[43]ແຜ່ນດິນຈະຖືກຖິ້ມຮ້າງໄວ້ໂດຍພວກເຂົາ,
ດັ່ງນັ້ນແຜ່ນດິນຈະຍິນດີກັບວັນສະບາໂຕຂອງແຜ່ນດິນໃນຂະນະທີ່ຖືກຖິ້ມໄວ້ໃຫ້ຮ້າງໂດຍບໍ່ມີພວກເຂົາ,
ພວກເຂົາຈະຕ້ອງໄດ້ຮັບໂທດສຳລັບຄວາມບາບທັງຫລາຍຂອງພວກເຂົາ, ເພາະພວກເຂົາເອງປະຕິເສດກົດເກນຂອງເຮົາ,
ແລະກຽດຊັງກົດຫມາຍຂອງເຮົາ.
[44]ແຕ່ນອກເຫນືອຈາກເລື່ອງທັງຫມົດນີ້, ເພື່ອພວກເຂົາຢູ່ແຜ່ນດິນຂອງເຫລົ່າສັດຕູເຮົາຈະປະຕິເສດພວກເຂົາ,
ເຮົາຈະບໍ່ກຽດຊັງພວກເຂົາຈົນທຳລາຍພວກເຂົາໃຫ້ຫມົດສິ້ນ, ແລະບໍ່ສິ້ນພັນທະສັນຍາຂອງເຮົາທີ່ມີກັບເຂົາ,
ເພາະເຮົາຄືພຣະຢາເວພຣະເຈົ້າຂອງພວກເຂົາ.[45]ແຕ່ເພື່ອເຫັນແກ່ເຂົາ, ເຮົາຈະລະນຶກເຖິງພັນທະສັນຍາກັບບັນພະບູລຸດຂອງພວກເຂົາ,
ຜູ້ທີ່ເຮົາໄດ້ນຳອອກຈາກແຜ່ນດິນເອຢິບຕໍ່ຫນ້າຕໍ່ຕາບັນດາຊົນຊາດ, ເພື່ອເຮົາຈະເປັນພຣະເຈົ້າຂອງພວກເຂົາເຮົາຄືພຣະຢາເວ."
[46]ເຫລົ່ານີ້ເປັນບັນຍັດກົດເກນ,
ແລະກົດຫມາຍຕ່າງໆທີ່ພຣະຢາເວໄດ້ຊົງເຮັດໄວ້ລະຫວ່າງພຣະອົງເອງກັບຄົນອິດສະຣາເອນທີ່ພູເຂົາຊີນາຍໂດຍຜ່ານໂມເຊ.

 generated on Tue Jun 17 19:01:42 2025

27 [1]ພຣະຢາເວໄດ້ຕັດສັ່ງແກ່ໂມເຊວ່າ,[2]"ຈົ່ງກ່າວແກ່ຄົນອິດສະຣາເອນວ່າ, 'ຖ້າຜູ້ໃດປະຕິຍານຕົນເປັນພິເສດຕໍ່ພຣະຢາເວ
ໃຫ້ໃຊ້ການປະມານຄ່າດັ່ງຕໍ່ໄປນີ້.

[3]ມາດຕະຖານລາຄາຂອງພວກເຈົ້າສຳຫລັບຜູ້ຊາຍຫນຶ່ງຄົນຈາກອາຍຸຊາວເຖິງຊາວຫົກປີຕ້ອງມີຄ່າເປັນເງິນຫ້າສິບເຊເຂ,
ຕາມເຊເຂຂອງສະຖານນະມັດສະການ.[4]ສຳຫລັບຜູ້ຍິງຫນຶ່ງຄົນທີ່ມີອາຍຸເທົ່າກັນມາດຕະຖານລາຄາຂອງພວກເຈົ້າຕ້ອງມີສາມສິບເຊເຂ.
[5]ຈາກອາຍຸຫ້າປີເຖິງຊາວປີມາດຕະຖານລາຄາຂອງພວກເຈົ້າສຳຫລັບຜູ້ຊາຍຕ້ອງມີຄ່າຊາວເຊເຂ, ແລະສຳຫລັບຜູ້ຍິງມີຄ່າສິບເຊເຂ.
[6]ຈາກອາຍຸຫນຶ່ງເດືອນຈົນເຖິງອາຍຸຫ້າປີ, ມາດຕະຖານລາຄາຂອງພວກເຈົ້າສຳຫລັບຜູ້ຊາຍຕ້ອງມີຄ່າເປັນເງິນຫ້າເຊເຂ,
ແລະສຳຫລັບຜູ້ຍິງມີຄ່າເປັນເງິນສາມເຊເຂ.
[7]ຈາກອາຍຸຫົກປີຂຶ້ນໄປສຳຫລັບຜູ້ຊາຍຄົນຫນຶ່ງ, ມາກຕະຖານລາຄາຂອງພວກເຈົ້າຕ້ອງມີຄ່າສິບຫ້າເຊເຂ,
ແລະສຳຫລັບຜູ້ຍິງຄົນຫນຶ່ງມີຄ່າສິບເຊເຂ.[8]ແຕ່ຖ້າສຳຫລັບຄົນທີ່ເຮັດການປະຕິຍານຕົນບໍ່ສາມາດຈ່າຍ, ຕາມລາຄາມາດຕະຖານໄດ້,
ກໍຕ້ອງໃຫ້ຄົນທີ່ຈະຖວາຍໄປພົບປະໂຣຫິດ,
ແລະປະໂຣຫິດຈະຕີຄ່າລາຄາລູກຄົນນັ້ນຕາມລາຄາທີ່ຜູ້ທີ່ເຮັດການປະຕິຍານຕົນນັ້ນສາມາດຈັດຫາມາໄດ້.
[9]ຖ້າມີບາງຄົນຕ້ອງການຖວາຍສັດໂຕຫນຶ່ງເປັນເຄື່ອງບູຊາແດ່ພຣະຢາເວ,
ແລະຖ້າພຣະຢາເວຊົງຍອມຮັບເຄື່ອງບູຊານັ້ນສັດນັ້ນກໍຈະຖືກແຍກໄວ້ແດ່ພຣະອົງ.[10]ຄົນນັ້ນຕ້ອງບໍ່ເອົາຫຍັງມາແທນຫລືສັບປ່ຽນສັດໂຕນັ້ນ,
ບໍ່ວ່າຈະເອົາໂຕທີ່ບໍ່ດີມາແທນໂຕທີ່ບໍ່ດີ, ຖ້າເຂົາເອົາໂຕຫນຶ່ງມາສັບປ່ຽນອີກໂຕຫນຶ່ງ, ທັງໂຕທີ່ນຳມາປ່ຽນດ
ແລະໂຕທີ່ຖືກສັບປ່ຽນຈະກາຍເປັນຂອງບໍລິສຸດທັງຄູ່.
[11]ຢ່າງໃດກໍຕາມ, ຖ້າຂອງຖວາຍທີ່ຄົນນັ້ນໄດ້ປະຕິຍານທີ່ຈະຖວາຍແດ່ພຣພະຢາເວພຣະຢາເວເປັນຂອງມົນທິນ,
ພຣະຢາເວກໍຈະບໍ່ຊົງຍອມຮັບຂອງຖວາຍນັ້ນ, ແລ້ວຄົນນັ້ນຕ້ອງນຳສັດນັ້ນໄປຫາປະໂຣຫິດ.
[12]ປະໂຣຫິດຈະຕີລາຄາສັດນັ້ນຕາມລາຄາຕະຫລາດຂອງສັດນັ້ນໆ, ບໍ່ວ່າປະໂຣຫິດຈະຕີລາຄາສັດນັ້ນເທົ່າໃດ, ກໍເປັນລາຄາຂອງສັດນັ້ນ.
[13]ຖ້າເຈົ້າຕ້ອງການໄຖ່ຄືນກໍຕ້ອງເພີ່ມລາຄາອີກຫນຶ່ງໃນຫ້າຂອງລາຄາໄຖ່.
[14]ເມື່ອຜູ້ໃດຖວາຍບ້ານຂອງຕົນໃຫ້ເປັນຂອງຖວາຍບໍລິສຸດແດ່ພຣະຢາເວ, ປະໂຣຫິດກໍຈະຕີລາຄາທັງຂອງດີ,
ແລະບໍ່ດີບໍ່ວ່າປະໂຣຫິດຕີລາຄາເທົ່າໃດກໍຈະເປັນໄປຕາມນັ້ນ.[15]ແຕ່ຖ້າເຈົ້າຂອງທີ່ຖວາຍບ້ານຂອງຕົນຕ້ອງການໄຖ່ບ້ານຄືນ,
ເຂົາກໍຈະຕ້ອງເພີ່ມອີກຫນຶ່ງໃນຫ້າຂອງລາຄາໄຖ່ຖອນບ້ານນັ້ນແລ້ວບ້ານກໍຈະເປັນຂອງເຂົາ.
[16]ຖ້າຜູ້ໃດຖວາຍທີ່ດິນບາງສ່ວນຂອງເຂົາລາຄາຂອງທີ່ດິນນັ້ນ, ຈະໄປເປັນຕາມປະລິມານຂອງເມັດທີ່ໄດຫວ່ານລົງໄປ,
ອັດຕາເງິນຫ້າສິບແທ່ງຕໍ່ເຂົ້າເດືອຍຊາວກິໂລ.
[17]ຖ້າເຂົາຖວາຍທີ່ດິນຂອງເຂົາໃນຊ່ວງປີແຫ່ງການສະເຫລີມສະຫລອງ, ທີ່ດິນກໍຈະມີລາຄາເຕັມ.
[18]ແຕ່ຖ້າເຂົາຖວາຍທີ່ດິນຫລັງຈາກປີແຫ່ງການສະເຫລີມສະຫລອງ.
ປະໂຣຫິດກໍຕ້ອງຄຳນວນລາຄາຂອງທີ່ດິນຕາມຈຳນວນປີທີ່ເຫລືອຈົນກວ່າຈະເຖິງປີແຫ່ງການສະເຫລີມສະຫລອງໃນຄັ້ງຕໍ່ໄປ,
ແລະຕ້ອງຫັກລາຄານັ້ນອອກເສຍ.
[19]ຖ້າຜູ້ໃດທີ່ຖວາຍທີ່ດິນນັ້ນຢາກຈະໄຖ່ທີ່ດິນຄືນ, ເຂົາກໍຈະຕ້ອງເພີ່ມລາຄາອີກຫນຶ່ງໃນຫ້າເຂົ້າໄປ, ແລ້ວທີ່ດິນຈະເປັນຂອງເຂົາ.
[20]ຖ້າເຂົາບໍ່ໄຖ່ຖອນທີ່ດິນຄືນຫລືຖ້າເຂົາຂາຍທີ່ດິນນັ້ນໃຫ້ແກ່ອີກຄົນຫນຶ່ງກໍບໍ່ສາມາດໄຖ່ທີ່ດິນນັ້ນຄືນໄດ້ອີກ.
[21]ແຕ່ເມື່ອດິນນັ້ນຖືກປົດປ່ອຍໃນປີແຫ່ງການສະເຫລີມສະຫລອງ, ກໍຕົກເປັນຂອງຖວາຍບໍລິສຸດແດ່ພຣະຢາເວແທນ.
ເຫມືອນເປັນທີ່ດິນທີ່ໄດ້ຖວາຍແດ່ພຣະຢາເວຢ່າງສົມບູນ, ທີ່ດິນນັ້ນຈະເປັນກຳມະສິດຂອງປະໂຣຫິດ.
[22]ຖ້າຜູ້ໃດຖວາຍທີ່ດິນທີ່ເຂົາໄດ້ຊື້ໄວ້, ແຕ່ທີ່ດິນນັ້ນບໍ່ໄດ້ເປັນສ່ວນຫນຶ່ງຈາກທີ່ດິນຂອງຄອບຄົວຂອງເຂົາ.
[23]ແລ້ວປະໂຣຫິດກໍຈະປະເມີນລາຄາທີ່ດິນໄປຈົນເຖິງປີແຫ່ງການສະເຫລີມສະຫລອງ ແລະຜູ້ນັ້ນຕ້ອງຈ່າຍລາຄາ,
ທີ່ດິນໃນມື້ນັ້ນໃຫ້ເປັນຂອງຖວາຍບໍລິສຸດແດ່ພຣະຢາເວ.
[24]ໃນປີແຫ່ງການສະເຫລີມສະຫລອງທີ່ດິນນັ້ນກໍຈະກັບຄືນໃຫ້ແກ່ຄົນທີ່ເຂົາໄດ້ໄປຊື້ມາ, ແກ່ເຈົ້າຂອງທີ່ດິນເດີມ.
[25]ການປະເມີນລາຄາທັງຫມົດຕ້ອງເປັນໄປຕາມນໍ້າຫນັກເຊເຂ, ຂອງສະຖານນະມັດສະການ, ຊາວເກຣາ ຕ້ອງມີຄ່າເທົ່າກັບຫນຶ່ງເຊເຂ.
[26]ບໍ່ໃຫ້ເອົາລູກສັດຫົວປີຈາກຝູງມາຖວາຍ, ເພາະລູກສັດຫົວປີເປັນຂອງພຣະຢາເວຢູ່ແລ້ວ, ບໍ່ວ່າງົວຫລືແກະ ສັດນັ້ນເປັນຂອງພຣະຢາເວ.
[27]ຖ້າເປັນສັດທີ່ເປັນມົນທິນ, ເຈົ້າຂອງກໍສາມາດຊື້ກັບໄປໄດ້ຕາມລາຄາຂອງມັນ, ແລະຕ້ອງເພີ່ມລາຄາອີກຫນຶ່ງໃນຫ້າ, ຖ້າສັດນັ້ນບໍ່ຖືກໄຖ່ຄືນ,
ກໍຈະຖືກຂາຍ, ຕາມລາຄາທີ່ກຳນົດໄວ້.
[28]ແຕ່ແມ່ນຫຍັງທີ່ເຂົາອຸທິດຖວາຍໃຫ້ແດ່ພຣະຢາເວ, ຈາກທຸກສິ່ງທີ່ເຂົາມີບໍ່ວ່າເປັນຄົນຫລືສັດ, ຫລືທີ່ດິນຂອງຄອບຄົວ,
ຈະຖືກຂາຍຫລືຖືກໄຖ່ຖອນບໍ່ໄດ້, ທຸກສິ່ງທີ່ຖືກຖວາຍເປັນສິ່ງບໍລິສຸດທີ່ສຸດແດ່ພຣະຢາເວ.
[29]ບໍ່ມີການຈ່າຍຄ່າໄຖ່ຖອນສຳຫລັບຄົນທີ່ຖືກມອບໄວ້ເພື່ອໃຫ້ຖືກທຳລາຍ, ຄົນນັ້ນຕ້ອງມີໂທດເຖິງຕາຍ.
[30]ສິບລິດທັງຫມົດຂອງແຜ່ນດິນ, ບໍ່ວ່າເປັນເມັດເຂົ້າເທິງແຜ່ນດິນຫລືຜົນຈາກຕົ້ນໄມ້ຕ່າງໆ, ເປັນຂອງພຣະຢາເວ,
ເປັນຂອງບໍລິສຸດແດ່ພຣະຢາເວ.[31]ຖ້າຄົນໃດໄຖ່ຖອນສິບລິດໃດໆ, ຂອງເຂົາ ເຂົາຕ້ອງເພີ່ມລາຄາເຂົ້າໄປອີກຫນຶ່ງໃນຫ້າ.
[32]ແລະທຸກໂຕທີ່ສິບໂຕຂອງຝູງງົວແລະຝູງແບ້ແກະ, ບໍ່ວ່າແມ່ນຫຍັງທີ່ຜ່ານການຖືກນັບດ້ວຍໄມ້ເທົ້າຂອງຜູ້ລ້ຽງແກະ,
ຫນຶ່ງໃນສິບນັ້ນຕ້ອງຖວາຍແດ່ພຣະຢາເວ.[33]ຜູ້ລ້ຽງແກະຕ້ອງບໍ່ເບິ່ງຫາສັດທີ່ດີກວ່າຫລືບໍ່ດີກວ່າ, ແລະເຂົາຕ້ອງບໍ່ສັບປ່ຽນກັບອີກໂຕຫນຶ່ງ
ຖ້າເຂົາສັບປ່ຽນ, ທັງໂຕທີ່ນຳມາປ່ຽນ, ແລະໂຕທີ່ຖືກສັບປ່ຽນກໍຈະເປັນຂອງບໍລິສຸດ, ບໍ່ສາມາດໄຖ່ຖອນໄດ້."'
[34]ເຫລົ່ານີ້ເປັນພຣະສັນຍາຕ່າງໆ ທີ່ພຣະຢາເວປຣະທານໃຫ້ແກ່ໂມເຊສຳລັບຄົນອິດສະຣາເອນທີ່ພູເຂົາຊີນາຍ.

# ຈົດບັນຊີ


generated on Tue Jun 17 19:01:42 2025

1 [1]ພຣະຢາເວໄດ້ບອກໂມເຊທີ່ຫໍເຕັນບ່ອນຊຸມນຸມທີ່ຖິ່ນແຫ້ງແລ້ງກັນດານຊີນາຍວ່າ,
ເຫດການນີ້ໄດ້ເກີດຂຶ້ນໃນມື້ທີ່ຫນຶ່ງຂອງເດືອນທີ່ສອງໃນຊ່ວງປີທີ່ສອງຫລັງຈາກທີ່ຄົນອິດສະຣາເອນໄດ້ອອກມາຈາກແຜ່ນດິນເອຢິບ
ພຣະຢາເວກ່າວວ່າ,[2]"ຈົ່ງເຮັດສຳມະໂນຄົວຂອງຜູ້ຊາຍອິດສະຣາເອນທຸກຄົນຕາມແຕ່ລະຕະກຸນ ແລະ ຕາມຄອບຄົວຂອງພໍ່ຂອງພວກເຂົາ. ຈົ່ງ
ນັບພວກເຂົາຕາມລາຍຊື່ຜູ້ຊາຍທັງຫມົດ.[3]ແຕ່ອາຍຸຊາວປີຂຶ້ນໄປ, ຈົ່ງນັບທຸກຄົນທີ່ສາມາດອອກຮົບເປັນທະຫານໄດ້ໃຫ້ກັບອິດສະຣາເອນໄດ້.
ເຈົ້າກັບອາໂລນ ຕ້ອງຈົດບັນທຶກຈຳນວນຂອງຜູ້ຊາຍໃນກຸ່ມທີ່ມີອາວຸດຂອງພວກເຂົາ.

[4]ຜູ້ຊາຍທີ່ເປັນຫົວຫນ້າຕະກຸນຈາກແຕ່ລະເຜົ່າ, ຕ້ອງມາຮັບໃຊ້ກັບພວກເຈົ້າໃນຖານະເປັນຜູ້ນຳເຜົ່າຂອງເຂົາ.
ຜູ້ນຳແຕ່ລະຄົນຕ້ອງນຳຜູ້ຊາຍທີ່ຈະສູ້ຮົບເພື່ອເຜົ່າຂອງເຂົາມາ.[5]ເຫລົ່ານີ້ເປັນລາຍຊື່ຂອງຜູ້ນຳທີ່ຕ້ອງສູ້ຮົບຮ່ວມກັບເຈົ້າຄື: ເອລີຊູ,
ລູກຊາຍຂອງເຊເດ ຈາກເຜົ່າຣູເບັນ.[6]ເຊລູມີເອນ, ລູກຊາຍຂອງຊູຣິດຊັດດາຍ ຈາກເຜົ່າຊີເມໂອນ;
[7]ນາໂຊນ, ລູກຊາຍຂອງອຳມີນາດາບຈາກເຜົ່າຢູດາ.[8]ເນທາເນນ, ລູກຊາຍຂອງຊູອາຈາກເຜົ່າອິດຊາຄາ.[9]ເອລີອາບ,
ລູກຊາຍຂອງເຮໂລນຈາກເຜົ່າເຊບູໂລນ.
[10]ເອລີຊາມາ, ລູກຊາຍຂອງອາມມີຮຸດຈາກເຜົ່າເອຟຣາອິມລູກຊາຍຂອງໂຢເຊັບ; ກາມານີເອນ, ລູກຊາຍຂອງເປນາຊູຈາກເຜົ່າມານາເຊ;
[11]ອາບີດານ, ລູກຊາຍຂອງເກດີໂອນີຈາກເຜົ່າເບັນຢາມິນ;
[12]ອາຮີເຢເຊ, ລູກຊາຍຂອງອຳມີຊັດດາຍຈາກເຜົ່າດານ;[13]ປາກີເອນ, ລູກຊາຍຂອງອົກກະຣັນຈາກເຜົ່າອາເຊ;[14]ເອລີອາສັບ,
ລູກຊາຍຂອງດູເອນຈາກເຜົ່າກາດ;[15]ອາຮີຣາ, ລູກເອນັນຈາກເຜົ່າເນັບທາລີ."
[16]ຄົນເຫລົ່ານີ້ເປັນພວກຜູ້ຊາຍທີ່ໄດ້ຮັບການແຕ່ງຕັ້ງຈາກປະຊາຊົນ. ພວກເຂົາໄດ້ນຳເຜົ່າຂອງບັນພະບູລຸດຂອງພວກເຂົາ,
ພວກເຂົາເປັນຜູ້ນຳໃນອິດສະຣາເອນ.
[17]ໂມເຊ ແລະ ອາໂລນໄດ້ນຳຄົນເຫລົ່ານີ້, ທີ່ໄດ້ຈົດບັນທຶກຕາມລາຍຊື່.[18]ແລະ
ທ່ານທັງສອງພ້ອມກັບຄົນເຫລົ່ານີ້ທັງຫມົດໄດ້ປະຊຸມຜູ້ຊາຍອິດສະຣາເອນທຸກຄົນໃນມື້ທີ່ຫນຶ່ງເດືອນສອງ.
ຈາກນັ້ນຜູ້ຊາຍແຕ່ລະຄົນທີ່ມີອາຍຸແຕ່ຊາວປີຂຶ້ນໄປໄດ້ຖືກຈົດຊື່ບັນພະບູລຸດຂອງເຂົາ. ເຂົາຕ້ອງບອກຊື່ຕະກຸນ
ແລະຄອບຄົວທີ່ສືບເຊື້ອສາຍມາຈາກບັນພະບູລຸດຂອງເຂົາ.
[19]ຫລັງຈາກທີ່ໂມເຊໄດ້ຈົດບັນທຶກໄດ້ຈົດບັນທຶກຈຳນວນຂອງພວກເຂົາໃນຖິ່ນແຫ້ງແລ້ງກັນດານຊີນາຍ,
ຕາມທີ່ພຣະຢາເວໄດ້ສັ່ງໄວ້ໃຫ້ທ່ານເຮັດແລ້ວ.
[20]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າຣູເບັນ, ລູກຊາຍກົກຂອງອິດສະຣາເອນ,
ແລະຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້ຈາກການຈົດບັນທຶກຂອງຕະກຸນແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.
[21]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າຣູເບັນໄດ້ 46,500ຄົນ.
[22]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າຊີເມໂອນ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້,
ຈາກການຈົດບັນທຶກຂອງຕະກຸນ ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[23]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າຊີເມໂອນໄດ້
59,300ຄົນ.
[24]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າ ກາດ ແລະ ຜູ້ຊາຍທີ່ມີອາຍຸແຕ່ຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້, ຈາກການບັນທຶກຂອງຕະກຸນ ແລະ
ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[25]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າກາດໄດ້45,650ຄົນ.
[26]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າຢູດາ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸແຕ່ຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້,
ຈາກການບັນທຶກຂອງຕະກຸນ ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[27]ພວກເຂົານັບໄດ້ຈຳນວນຜູ້ຊາຍຈາກເຜົ່າຢູດາໄດ້ 74,600ຄົນ.
[28]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າອິດຊາຄາ ແລະຜູ້ຊາຍທຸກຄົນທີ່ມີ ອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້,
ຈາກການບັນທຶກຂອງຕະກຸນແລະຄອບຄົວຂອງບັນພະບູລຸດຂອງພວກເຂົາ.[29]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າອິດຊາຄາໄດ້ 54,400ຄົນ.
[30]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າເຊບູໂລນ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກສູ້ຮົບໄດ້,
ຈາກການບັນທຶກຂອງຕະກຸນ ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[31]ພວກເຂົານັບໄດ້ຈຳນວນຜູ້ຊາຍຈາກເຜົ່າ ເຊບູໂລນໄດ້
57,400ຄົນ.
[32]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າເອຟຣາອິມລູກຊາຍຂອງໂຢເຊັບ ແລະຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້,
ຈາກການບັນທຶກຂອງຕະກຸນແລະຄອບຄົວຂອງບັນພະບູລຸດຂອງພວກເຂົາ.[33]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າເອຟຣາອິມໄດ້ 40,500ຄົນ.
[34]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າ ມານັດເຊລູກຊາຍໂຢເຊບ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້
ຈາກການບັນທຶກຂອງຕະກຸນແລະຄອບຄົວຂອງບັນພະບູລຸດຂອງພວກເຂົາ.[35]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າມານັດເຊໄດ້ 32,200ຄົນ.
[36]ລາຍຊື່ຂອງແຕ່ລະຄົນທີ່ນັດໄດ້ຈາກເຜົ່າ ເບັນຢາມິນ ແລະ
ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້ຈາກການບັນທຶກຂອງຕະກຸນແລະຄອບຄົວຂອງບັນພະບູລຸດຂອງພວກເຂົາ.
[37]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າເບັນຢາມິນໄດ້ 35,400ຄົນ.
[38]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າດານ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້, ຈາກການບັນທຶກຂອງຕະກຸນ
ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[39]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າດານໄດ້ 62,700ຄົນ.
[40]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່າ ອາເຊ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້, ຈາກການບັນທຶກຂອງຕະກຸນ
ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[41]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າອາເຊໄດ້ 41,500ຄົນ.
[42]ລາຍຊື່ຂອງແຕ່ລະຄົນທີ່ນັບໄດ້ຈາກເຜົ່ານັບທາລີ ແລະ ຜູ້ຊາຍທຸກຄົນທີ່ມີອາຍຸຊາວປີຂຶ້ນໄປທີ່ສາມາດອອກຮົບໄດ້ຈາກການບັນທຶກຂອງຕະກຸນ
ແລະ ຄອບຄົວຂອງບັນພະບູລຸດຂອງພວກເຂົາ.[43]ພວກເຂົານັບຈຳນວນຜູ້ຊາຍຈາກເຜົ່າ ນັບທາລີໄດ້ 53,400ຄົນ.

[44]ໂມເຊແລະອາໂຣນນັບພວກຜູ້ຊາຍເຫລົ່ານີ້ທຸກຄົນລວມທັງຜູ້ຊາຍສິບສອງຄົນທີ່ເປັນຜູ້ນຳຂອງສິບສອງເຜົ່າຂອງອິດສະຣາເອນ.
[45]ເພາະສະນັ້ນຜູ້ຊາຍອິດສະຣາເອນທຸກຄົນທີ່ມີອາຍຸຊາວປີຂຶ້ນໄປ, ທີ່ສາມາດອອກຮົບໄດ້, ທີ່ໄດ້ນັບໃນແຕ່ລະຄອບຄົວຂອງພວກເຂົາ.
[46]ພວກເຂົານັບຈຳນວນຜູ້ຊາຍໄດ້ 603,550.
[47]ແຕ່ບໍ່ໄດ້ນັບພວກຜູ້ຊາຍທີ່ສືບເຊື້ອສາຍຈາກເລວີ.[48]ເພາະພຣະເຈົ້າຢາເວໄດ້ສັ່ງໂມເຊໄວ້ວ່າ,[49]“ ເຈົ້າບໍ່ຕ້ອງນັບຈຳນວນພົນ ເຜົ່າເລວີ
ຫລືລວມພວກເຂົາໃນຈຳນວນລວມທັງຫມົດຂອງຄົນອິດສະຣາເອນ,
[50]ແທນທີ່ຈະເຮັດແບບນັ້ນຈົ່ງມອບມາຍໃຫ້ພວກເລວີເບິ່ງແຍງຫໍເຕັນສັກສິດແຫ່ງພັນທະສັນຍາ, ແລະ ເບິ່ງແຍງເຄື່ອງໃຊ້ທຸກຢ່າງໃນຫໍເຕັນ
ສັກສິດ ແລະ ເບິ່ງແຍງທຸກສິ່ງທີ່ຢູ່ໃນຫໍເຕັນສັກສິດນັ້ນ, ພວກເລວີຕ້ອງຂົນເຕັນສັກສິດຕະຫລອດທັງຮັບໃຊ້ຢູ່ໃນທີ່ນັ້ນ ແລະຕັ້ງທີ່ພັກອ້ອມຮອບທີ່
ນັ້ນດ້ວຍ.
[51]ພວກເລວີກໍຈະມ້າງຫໍເຕັນສັກສິດລົງເມື່ອມີການຕັ້ງຫໍເຕັນຂຶ້ນພວກເລວີຕ້ອງຕັ້ງຫໍເຕັນຂຶ້ນ. ຄົນແປກຫນ້າຄົນໃດທີ່ເຂົ້າມາໃກ້ຫໍເຕັນສັກສິດຈະ
ໄດ້ຮັບໂທດເຖິງຕາຍ.[52]ສ່ວນຊາວອິດສະຣາເອນຕັ້ງຄ້າຍພັກຂອງພວກຕົນຜູ້ຊາຍແຕ່ລະຄົນຕ້ອງຕັ້ງຄ້າຍພັກໃກ້ກັບທຸງທີ່ເປັນຂອງກຸ່ມມີອາວຸດ
ຂອງຕົນ.
[53]ຢ່າງໃດກໍຕາມ, ພວກເລວີຕ້ອງຕັ້ງຄ້າຍຂອງພວກເຂົາຢູ່ອ້ອມຮອບຫໍເຕັນສັກສິດແຫ່ງພັນທະສັນຍາໄວ້ເພື່ອທີ່ຄວາມໂກດຮ້າຍຈະບໍ່ລົງມາເຫນືອ
ຊຸມຊົນອິດສະຣາເອນໄດ້. ພວກເລວີຕ້ອງເຝົ້າຮັກສາຫໍເຕັນສັກສິດແຫ່ງພັນທະສັນຍາໄວ້."[54]ປະຊາຊົນອິດສະຣາເອນຈຶ່ງໄດ້ເຮັດທຸກໆ
ສິ່ງເຫລົ່ານີ້. ພວກເຂົາເຮັດທຸກຢ່າງຕາມທີ່ພຣະຢາເວໄດ້ສັ່ງຜ່ານທາງໂມເຊ.


generated on Tue Jun 17 19:01:42 2025

2 [1]ພຣະຢາເວກ່າວກັບໂມເຊ ແລະ ອາໂຣນອີກຄັ້ງ. ພຣະອົງກ່າວວ່າ,[2]"ຄົນອິດສະຣາເອນແຕ່ລະຄົນຕ້ອງຕັ້ງຄ້າຍພັກອ້ອມຮອບທຸງຂອງຕົນ,
ຕາມທຸງຂອງຄອບຄົວຂອງບັນພະບູລຸດຂອງຕົນເອງ. ພວກເຂົາຈະຕັ້ງຄ້າຍພັກຢູ່ອ້ອມຮອບຫໍເຕັນບ່ອນຊຸມນຸມທຸກດ້ານ.

[3]ຄ້າຍພັກເຫລົ່ານັ້ນທີ່ຈະຕັ້ງຢູ່ທາງທິດຕາເວັນອອກຂອງຫໍເຕັນບ່ອນຊຸມນຸມ, ທີ່ດວງຕາເວັນຂຶ້ນ, ຄ້າຍພັກເຫລົ່ານັ້ນເປັນຄ້າຍພັກຂອງຢູດາ ແລະ
ພວກເຂົາຕັ້ງຄ້າຍພັກພາຍໃຕ້ທຸງຂອງຕົນ. ນາໂຊນລູກອຳມີນາດາບເປັນຜູ້ນຳຂອງຄົນຢູດາ.[4]ຈຳນວນຄົນຢູດາຄື 74,600ຄົນ.
[5]ເຜົ່າອິດສະຣາເອນຕ້ອງຕັ້ງຄ້າຍພັກຖັດໄປຈາກເຜົ່າຢູດາ. ເນທານາເອນລູກຊູອາຕ້ອງນຳທະຫານຂອງອິດຊາຄາ.
[6]ຈຳນວນຄົນໃນກອງຂອງເຂົາຄື 54,400ຄົນ.
[7]ເອລີອາບລູກເຮໂລນຕ້ອງນຳທະຫານຂອງເຊບູໂລນ.[8]ຈຳນວນຄົນໃນກອງຂອງເຂົາຄື 57,400ຄົນ.
[9]ຈຳນວນຄົນທັງຫມົດຂອງຄ້າຍພັກຢູດາຄື 186,400ຄົນ. ພວກເຂົາຈະອອກເດີນທາງອອກຫນ້າກ່ອນ.
[10]ທາງດ້ານທິດໃຕ້ຈະເປັນຄ້າຍພັກຂອງຣູເບັນພາຍໃຕ້ທຸງພວກເຂົາ, ຜູ້ນຳຄ້າຍພັກຂອງຣູເບັນຄືເອລີຊູລູກເຊເດອູເຣ.
[11]ຈຳນວນຄົນໃນກອງຂອງເຂົາຄື 46,500ຄົນ.
[12]ເຜົ່າຊີເມໂອນຕັ້ງຄ້າຍພັກຖັດຈາກຣູເບັນ. ຜູ້ນຳຂອງຊີເມໂອນຄືເຊລູມີເອນລູກຊູຣິດຊັດດາຍ.[13]ຄົນເຫລົ່ານັ້ນທີ່ນັບໄດ້ໃນກອງຂອງເຂົາຄື
59,300ຄົນ.
[14]ເຜົ່າກາດຢູ່ຖັດໄປ. ຜູ້ນຳຂອງຄົນຂອງພຣະເຈົ້າຄືເອລີອາສັບລູກດູເອນ.[15]ຈຳນວນຄົນໃນກອງຂອງເຂົາຄື 45,650ຄົນ.
[16]ຄົນທັງຫມົດທີ່ນັບໄດ້ໃນຄ້າຍພັກຣູເບັນຕາມກອງຂອງພວກເຂົາ, ຄື 151,450 ຄົນ. ພວກເຂົາຈະອອກເດີນທາງເປັນລຳດັບທີສອງ.
[17]ຕໍ່ຈາກນັ້ນຫໍເຕັນບ່ອນຊຸມນຸມ ຕ້ອງອອກມາຈາກຄ້າຍພັກພ້ອມກັບຄົນເລວີທີ່ຢູ່ທາງກາງຂອງຄ້າຍພັກທັງຫມົດ. ພວກເຂົາຕ້ອງອອກ
ມາຈາກຄ້າຍໃຫ້ເປັນລຳດັບແບບດຽວກັບທີ່ພວກເຂົາເຂົ້າໄປໃນຄ້າຍພັກ. ຜູ້ຊາຍທຸກຄົນຕ້ອງຢູ່ໃນບ່ອນຂອງເຂົາຕາມທຸງໄຊຂອງຕົນ.
[18]ກອງຂອງຄ້າຍພັກຂອງເອຟຣາອິມຢູ່ພາຍໃຕ້ທຸງຂອງພວກເຂົາ ຜູ້ນຳຂອງພວກເຂົາຄືເອລີຊາມາລູກອາມມີຮຸດ.[19]ຈຳນວນຄົນໃນກອງຂອງເຂົາຄື
40,500ຄົນ.
[20]ຖັດຈາກພວກເຂົາໄປຄືເຜົ່າມານັດເຊ. ຜູ້ນຳຂອງມານັດເຊຄືກາມາລີເອນລູກເປດາຊູ.[21]ຈຳນວນຄົນໃນກອງຂອງເຂົາຄື 32,200 ຄົນ.
[22]ຖັດໄປຈະເປັນເຜົ່າເບັນຢາມິນ. ຜູ້ນຳຂອງເບັນຢາມິນຄື ອາບີດານລູກເກເດໂອນີ.[23]ຈຳນວນຄົນໃນກອງຂອງເຂົາຄື 35,400 ຄົນ.
[24]ຈຳນວນຄົນທັງຫມົດທີ່ນັບໄດ້ໃນຄ້າຍພັກຂອງເອຟຣາອິ ຄື 108,100ຄົນພວກເຂົາຈະອອກເດີນທາງເປັນລຳດັບທີສາມ.
[25]ທາງດ້ານທິດເຫນືອຈະເປັນກອງຂອງຄ້າຍພັກຂອງດານ. ຜູ້ນຳຂອງຄົນດານຄື ອາຮີເອເຊລູກອຳມີຊັດດາຍ.[26]ຈຳນວນຄົນໃນກອງຂອງເຂົາຄື
62,700 ຄົນ.
[27]ຄົນຂອງເຜົ່າອາເຊຕັ້ງຄ້າຍພັກຖັດໄປຈາກດານ. ຜູ້ນຳຂອງອາເຊຄືປາກີເອນລູກອົກກະຣານ.[28]ຈຳນວນຄົນໃນກອງຂອງເຂົາຄື 41,500 ຄົນ.
[29]ເຜົ່ານັບທາລີຢູ່ຖັດໄປ. ຜູ້ນຳຂອງນັບທາລີຄື ອາຮີຣາລູກເອນັນ.[30]ຈຳນວນຄົນໃນກອງເຂົາຄື53,400ຄົນ.
[31]ຈຳນວນຄົນທັງຫມົດນີ້ນັບໄດ້ໃນຄ້າຍພັກທີ່ຢູ່ກັບດານຄື 157,600ຄົນພວກເຂົາຈະອອກຈາກຄ້າຍພັກເປັນລຳດັບສຸດທ້າຍ,
ພາຍໃຕ້ທຸງຂອງພວກເຂົາ."
[32]ຄົນເຫລົ່ານີ້ເປັນຊົນຊາດອິດສະຣາເອນ, ທີ່ນັບໄດ້ຕາມຄອບຄົວຂອງພວກເຂົາ, ຈຳນວນຄົນເຫລົ່ານັ້ນທີ່ນັບໄດ້ທັງຫມົດໃນຄ້າຍພັກ,
ຂອງພວກເຂົາຕາມກອງຕ່າງໆຄື 603,550ຄົນ.[33]ແຕ່ໂມເຊກັບອາໂລນບໍ່ໄດ້ນັບຄົນເລວີທີ່ຢູ່ທ່າມກາງຄົນອິດສະຣາເອນ.
ນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງໄວ້ກັບໂມເຊ.
[34]ຄົນອິດສະຣາເອນໄດ້ເຮັດທຸກສິ່ງຕາມທີ່ພຣະຢາເວໄດ້ຊົງສັ່ງໄວ້ກັບໂມເຊ. ພວກເຂົາຕັ້ງຄ້າຍພັກຕາມທຸງຂອງພວກເຂົາ
ແລະອອກໄປຈາກຄ້າຍຕາມຕະກຸນຂອງພວກເຂົາ, ພວກເຂົາລຽງລຳດັບຕາມຄອບຄົວຂອງບັນພະບູລຸດຂອງເຂົາ.

 generated on Tue Jun 17 19:01:42 2025

# 3

1ຕອນນີ້ເປັນປະຫວັດສາດຂອງເຊື້ອສາຍຂອງອາໂຣນແລະໂມເຊເມື່ອພຣະຢາເວກ່າວກັບໂມເຊເທິງພູເຂົາຊີນາຍ.
2ຊື່ລູກຊາຍຂອງອາໂຣນຄືນາດາບລູກກົກ, ແລະ ອາບີຮູ, ອາເລອາຊາ, ແລະອີທາມາ.

3ເຫລົ່ານີ້ເປັນຊື່ຂອງລູກຊາຍອາໂຣນ, ຜູ້ທີ່ໄດ້ຮັບການເຈີມເປັນປະໂຣຫິດ ແລະ ຜູ້ທີ່ໄດ້ຮັບການສະຖາປະນາໃຫ້ເຮັດຫນ້າທີ່ເປັນປະໂຣຫິດ.
4ແຕ່ນາດາບ ແລະ ອາບີຮູໄດ້ລົ້ມລົງຕາຍຕໍ່ຫນ້າພຣະຢາເວເມື່ອພວກເຂົາໄດ້ຖວາຍໄຟທີ່ຕ້ອງຫ້າມແດ່ພຣະອົງໃນຖິ່ນແຫ້ງແລ້ງກັນດານຊີນາຍ.
ນາດາບ ແລະ ອາບີຮູບໍ່ມີລູກ, ດັ່ງນັ້ນເອເລອາຊາກັບອີທາມາຈຶ່ງເຮັດຫນ້າທີ່ເປັນປະໂຣຫິດກັບອາໂຣນພໍ່ຂອງພວກເຂົາ.
5ພຣະຢາເວກ່າວກັບໂມເຊ. ພຣະອົງກ່າວວ່າ, 6"ຈົ່ງນໍາເຜົ່າເລວີມາ ແລະ ໃຫ້ພວກເຂົາຢູ່ຕໍ່ຫນ້າອາໂຣນປະໂຣຫິດເພື່ອໃຫ້ພວກເຂົາຊ່ວຍທ່ານ.
7ພວກເຂົາຕ້ອງປະຕິບັດຫນ້າທີ່ແທນອາໂຣນ ແລະ ແທນຊຸມຊົນທັງຫມົດທີ່ຫນ້າຫໍເຕັນບ່ອນຊຸມນຸມ.
ພວກເຂົາຕ້ອງທໍາງານຮັບໃຊ້ໃນຫໍເຕັນສັກສິດ. 8ພວກເຂົາຈະຕ້ອງຮັບຜິດຊອບເຄື່ອງໃຊ້ທຸກຢ່າງໃນໃນເຕັນທີ່ຊຸມນຸມ, ແລະ
ພວກເຂົາຕ້ອງຊ່ວຍບັນດາເຜົ່າຂອງອິດສະຣາເອນໃນການເຮັດຫນ້າທີ່ຂົນຍ້າຍຫໍເຕັນສັກສິດ.
9ເຈົ້າຕ້ອງມອບຄົນເລວີໃຫ້ກັບອາໂຣນ ແລະ ລູກຊາຍຂອງເຂົາ.
ພວກເຂົາຖືກມອບໄວ້ໃຫ້ຊ່ວຍເຂົາເຮັດວຽກຮັບໃຊ້ຄົນອິດສະຣາເອນຕະຫລອດໄປ. 10ເຈົ້າຕ້ອງແຕ່ງຕັ້ງອາໂຣນ ແລະ
ພວກລູກຂອງເຂົາໃຫ້ເປັນປະໂຣຫິດ, ແຕ່ຄົນຕ່າງຊາດຄົນໃດເຂົ້າມາໃກ້ຕ້ອງຖືກລົງໂທດເຖິງຕາຍ."
11ພຣະຢາເວກ່າວກັບໂມເຊ. ພຣະອົງກ່າວວ່າ, 12"ເບິ່ງແມ, ເຮົາໄດ້ເລືອກຄົນເລວີມາຈາກທ່າມກາງຄົນອິດສະຣາເອນ.
ເຮົາໄດ້ເຮັດເຊັ່ນນີ້ແທນທີ່ເຮົາຈະເລືອກລູກຊາຍກົກແຕ່ລະຄົນທີ່ເກີດມາທ່າມກາງຄົນອິດສະຣາເອນ. ຄົນເລວີເປັນຂອງເຮົາ.
13ລູກຊາຍກົກທັງຫມົດເປັນຂອງເຮົາ. ໃນວັນທີ່ເຮົາຂ້າລູກຊາຍກົກທັງຫມົດໃນເອຢິບ, ເຮົາໄດ້ແຍກລູກກົກທັງຫມົດໃນອິດສະຣາເອນ,
ອອກມາເພື່ອເຮົາເອງທັງຄົນ ແລະ ສັດ. ພວກເຂົາທັງຫມົດເປັນຂອງເຮົາ. ເຮົາຄືຢາເວ."
14ພຣະຢາເວໄດ້ກ່າວກັບໂມເຊໃນຖິ່ນແຫ້ງແລ້ງກັນດານຊີນາຍ. ພຣະອົງກ່າວວ່າ, 15ຈົ່ງນັບເຊື້ອສາຍຂອງເລວີໃນແຕ່ລະຄອບຄົວ,
ໃນວົງວານບັນພະບູລຸຂອງພວກເຂົາ. ຈົ່ງນັບຜູ້ຊາຍທຸກຄົນທີ່ມີອາຍຸຫນຶ່ງເດືອນຂຶ້ນໄປ." 16ໂມເຊກໍນັບພວກເຂົາ. ຕາມຄໍາກ່າວຂອງພຣະຢາເວ,
ຕາມທີ່ພຣະອົງສັ່ງໃຫ້ເຮັດ.
17ຊື່ຂອງພວກລູກຊາຍພວກເລວີຄື ເກໂຊນ, ໂກຮາດ ແລະ ເມຣາລີ. 18ຕະກຸນທີ່ມາຈາກລູກຂອງເກໂຊນຄືລິບນີແລະຊີເມອີ.
19ຕະກຸນທີ່ມາຈາກລູກຂອງໂກຮາດຄື ອຳຣາມ, ອີຊະຮາ, ເຮັບໂລນ, ແລະ ອຸດຊີເອນ. 20ຕະກຸນທີ່ມາຈາກລູກຂອງເມຣາຣີຄື ມາຮະລີ ແລະ ມູຊີ.
ຊື່ເຫລົ່ານີ້ເປັນຕະກຸນຂອງຄົນເລວີ, ທີ່ຈົດລາຍຊື່ຕະກຸນຕໍ່ຕະກຸນ.
21ຕະກຸນທີ່ມາຈາກຄົນລິບນີແລະຄົນຊີມີອີຈາກເກໂຊນ. ຄົນເຫລົ່ານີ້ເປັນຕະກຸນຂອງຄົນເກໂຊນ.
22ຜູ້ຊາຍທຸກຄົນທີ່ມີອາຍຸຫນຶ່ງເດືອນຂຶ້ນໄປທີ່ນັບໄດ້, ລວມທັງຫມົດ 7,500ຄົນ.
23ຕະກຸນຂອງຄົນເກໂຊນຕ້ອງຕັ້ງຄ້າຍພັກທາງດ້ານທິດຕາເວັນຕົກຂອງຫໍເຕັນສັກສິດ.
24ເອລີອາສັບລູກຂອງລາເອນຕ້ອງນໍາຕະກຸນຂອງເຊື້ອສາຍ ຂອງຄົນເກໂຊນ.
25ຄອບຄົວຂອງເກໂຊນຕ້ອງຮັບຜິດຊອບຫໍເຕັນບ່ອນຊຸມນຸມລວມທັງຫໍເຕັນສັກສິດດ້ວຍ, ພວກເຂົາຕ້ອງຮັບຜິດຊອບເຕັນນັ້ນ ສິ່ງທີ່ປົກຄຸມເຕັນ,
ແລະຜ້າກັ້ງທີ່ໃຊ້ເປັນທາງເຂົ້າຂອງເຕັນທີ່ຊຸມນຸມ. 26ພວກເຂົາຕ້ອງຮັບຜິດຊອບຜ້າກັ້ງບັງລານ,
ຜ້າກັ້ງທາງເຂົ້າລານທີ່ຢູ່ຮອບສະຖານທີ່ນະມັດສະການແລະແທ່ນບູຊາ.
ພວກເຂົາຕ້ອງຮັບຜິດຊອບເຊືອກໂຍງຂອງເຕັນບ່ອນຊຸມນຸມແລະຮັບຜິດຊອບທຸກຢ່າທີ່ຢູ່ໃນນັ້ນ.
27ຕະກຸນເຫລົ່ານີ້ມາຈາກໂກຮາດຄື: ຕະກຸນຂອງອຳຣາມ, ແລະຕະກຸນຂອງອີຊະຮາ, ຕະກຸນຂອງເຮັບໂລນ, ແລະຕະກຸນຂອງອຸດຊີເອນ.
ຕະກຸນເຫລົ່ານີ້ເປັນຂອງໂກຮາດ. 28ຜູ້ຊາຍທີ່ມີອາຍຸຫນຶ່ງເດືອນຂຶ້ນໄປທີ່ນັບໄດ້ 8,600 ຄົນ. ທີ່ຮັກສາສິ່ງຕ່າງໆທີ່ເປັນຂອງພຣະຢາເວ.
29ຄອບຄົວຂອງເຊື້ອສາຍຂອງໂກຮາດ ຕ້ອງຕັ້ງຄ້າຍພັກທາງດ້ານທິດໃຕ້ຂອງຫໍເຕັນສັກສິດ.
30ເອລີຊາຟັນລູກຂອງອຸດຊີເອນຈະຕ້ອງນໍາຕະກຸນໂກຮາດ. 31ພວກເຂົາຕ້ອງຮັບຜິດຊອບຫີບພັນທະສັນຍາ, ໂຕະ, ຫລັກຕະກຽງ, ແທ່ນບູຊາ,
ແລະສິ່ງບໍຣິສຸດທີ່ໃຊ້ໃນການບົວລະບັດຂອງວພວກເຂົາ ຜ້າກັ້ງ, ແລະງານທຸກຢ່າງທີ່ຢູ່ບໍລິເວນໂດຍຮອບນັ້ນ. 32ເອເລອາຊາ
ລູກອາໂຣນປະໂຣຫິດຕ້ອງນໍາຄົນເລວີ. ເຂົາຕ້ອງກໍາກັບຮັບຜິດຊອບຄົນທີ່ດູແລສະຖານທີ່ສັກສິດ.
33ມີສອງຕະກຸນທີ່ມາຈາກຕະກຸນເມຣາຣີຄື: ຕະກຸນຂອງຄົນມາຮະລີແລະຕະກຸນຂອງຄົນມູຊີ. ຕະກຸນເຫລົ່ານີ້ມາຈາກເມຣາຣີ.
34ຜູ້ຊາຍທີ່ມີອາຍຸຫນຶ່ງເດືອນຂຶ້ນໄປທີ່ນັບໄດ້ 6,200 ຄົນ. 35ຊູຣີເອນລູກຊາຍຂອງອາບີໄຮຕ້ອງນໍາຕະກຸນຂອງເມຣາຣີ.
ພວກເຂົາຕອ້ງຕັ້ງຄ້າຍພັກທາງດ້ານທິດເຫນືອຂອງຫໍເຕັນສັກສິດ.
36ເຊື້ອສາຍຂອງເມຣາຣີຕ້ອງຮັບຜິດຊອບໄມ້ຂອບຂອງຫໍເຕັນສັກສິດ, ຄານ, ໄມ້ເສົາ, ແລະຕີນເສົາແລະສ່ວນປະກອບທັງຫມົດ ແລະ
ລວມເຖິງທຸກສິ່ງທີ່ກ່ຽວຂ້ອງກັບສິ່ງເຫລົ່ານີ້. 37ເສົາຫລັກ ແລະ ໄມ້ເສົາຂອງລານທີ່ຢູ່ຮອບຫໍເຕັນ ພ້ອມກັບຂໍ້ຕໍ່, ຫລັກສຽບ, ແລະເຊືອກມັດ.
38ໂມເຊ ແລະ ອາໂຣນກັບບັນດາລູກຊາຍຂອງເພິ່ນນັ້ນ ຕ້ອງຕັ້ງຄ້າຍພັກທາງທິດຕາເວັນອອກຂອງຫໍເຕັນສັກສິດ, ທີ່ຢູ່ຕໍ່ຫນ້າຫໍເຕັນບ່ອນຊຸມນຸມ.
ພວກເຂົາຮັບຜິດຊອບໃນການປະຕິບັດພາລະກິດຫນ້າທີ່ໃນບ່ອນນະມັດສະການແລະຫນ້າທີ່ຂອງຄົນອິດສະຣາເອນ.
ຄົນຕ່າງຊາດທີ່ເຂົ້າມາໃກ້ບ່ອນນະມັດສະການຕ້ອງມີໂທດເຖິງຕາຍ. 39ໂມເຊກັບອາໂຣນໄດ້ນັບຜູ້ຊາຍທັງຫມົດໃນຕະກຸນຂອງເລວີ
ທີ່ມີອາຍຸຫນຶ່ງເດືອນຂຶ້ນໄປ, ຕາມທີ່ພຣະຢາເວຊົງສັ່ງໄວ້. ພວກເຂົານັບໄດ້ສອງຫມື່ນສອງພັນຄົນ.
40ພຣະຢາເວກ່າວກັບໂມເຊວ່າ, "ຈົ່ງນັບລູກຊາຍກົກທັງຫມົດຂອງຄົນອິດສະຣາເອນທີ່ມີອາຍຸຫນຶ່ງເດືອນຂຶ້ນໄປ. ຈົ່ງຈົດລາຍຊື່ຂອງພວກເຂົາ.
41ເຈົ້າຕ້ອງນໍາເອົາຄົນເລວີໃຫ້ກັບເຮົາ ເຮົາຄືຢາເວ ເພື່ອແທນລູກກົກທັງຫມົດຂອງຄົນອິດສະຣາເອນ,
ແລະຝູງສັດຂອງຄົນເລວີແທນລູກຫົວປີຂອງຝູງສັດຂອງເຊື້ອສາຍອິດສະຣາເອນ.
42ໂມເຊນັບລູກຫົວປີທັງຫມົດຂອງຄົນອິດສະຣາເອນ ຕາມທີ່ພຣະຢາເວຊົງສັ່ງເພິ່ນໃຫ້ເຮັດ.
43ເພິ່ນນັບລູກຊາຍຫົວປີທຸກຄົນຕາມຊື່ທີ່ມີອາຍຸຫນຶ່ງເດືອນຂຶ້ນໄປເພິ່ນນັບໄດ້ 22,273ຄົນ

[44]ພຣະຢາເວ, ກ່າວກັບໂມເຊ. ອີກຄັ້ງໜຶ່ງ ພຣະອົງກ່າວວ່າ,[45]ຈົ່ງນຳເອົາຄົນເລວີມາແທນທີ່ລູກຫົວປີທຸກຄົນທີ່ຢູ່ທ່າມກາງຄົນອິດສະຣາເອນ,
ແລະນຳເອົາຝູງສັດຂອງຄົນເລວີມາແທນສັດຂອງຊຸມຊົນນັ້ນ ຄົນເລວີເປັນຂອງເຮົາ ເຮົາຄືຢາເວ.
[46]ເຈົ້າຕ້ອງເກັບເງິນຄົນລະຫ້າຫລຽນເພື່ອເປັນຄ່າໄຖ່ລູກຊາຍກົກຂອງຄົນອິດສະຣາເອນ 273 ຄົນທີ່ເກີນຈຳນວນຂອງຄົນເລວີ.
[47]ເຈົ້າຕ້ອງໃຊ້ຫລຽນຂອງສຳນັກນະມັດສະການ. ເປັນຕົວກຳນົດການສັ່ງນ້ຳໜັກຂອງເຈົ້າ ໜຶ່ງຫລຽນເທົ່າກັບຊາວເກຣາ.
[48]ເຈົ້າຕ້ອງມອບເງິນຄ່າໄຖ່ທີ່ເຈົ້າຈ່າຍໃຫ້ກັບອາໂຣນລະບັນດາລູກຂອງເຂົາ."[49]ດັ່ງນັ້ນໂມເຊຈຶ່ງເກັບຄ່າໄຖ່ຈາກຄົນເຫລົ່ານັ້ນທີ່ເກີນຈາກຈຳນວນຂອງຄົນ
ທີ່ຄົນເລວີໄດ້ໄຖ່ໄວ້ແລ້ວ.[50]ໂມເຊເກັບເງິນຈາກລູກຊາຍກົກຂອງຄົນອິດສະຣາເອນ ທ່ານເກັບໄດ້ 1,365 ຫລຽນເຊເຄ,
ທີ່ສັ່ງນ້ຳໜັກຕາມສຳນັກນະມັດສະການ.[51]ໂມເຊໄດ້ມອບເງິນຄ່າໄຖ່ນັ້ນໃຫ້ກັບອາໂລນແລະພວກລູກຂອງລາວ.
ໂມເຊໄດ້ເຮັດທຸກຢ່າງຕາມຄຳສັ່ງຂອງພຣະຢາເວທີ່ຊົງບອກໃຫ້ທ່ານເຮັດ, ຕາມທີ່ພຣະຢາເວໄດ້ຊົງສັ່ງທ່ານໄວ້.


generated on Tue Jun 17 19:01:42 2025

# 4

[1-2]ພຣະຢາເວກ່າວກັບໂມເຊແລະກັບອາໂຣນ. ພຣະອົງກ່າວວ່າ, "ຈົ່ງເຮັດສຳມະໂນຄົວຂອງຜູ້ຊາຍເຊື້ອສາຍຂອງໂກຮາດຈາກທ່າມກາງຄົນເລວີ,
ຕາມຕາມຕະກູນແລະຄອບຄົວຂອງບັນພະບູລຸດຂອງພວກເຂົາ.[3]ຈົ່ງນັບຜູ້ຊາຍທຸກຄົນທີ່ມີອາຍຸ 30ປີ ເຖິງ 50 ປີ.
ຜູ້ຊາຍເຫລົ່ານີ້ຕ້ອງເຂົ້າຮ່ວມກັບກຸ່ມຄົນທີ່ປະຕິບັດໜ້າທີ່ໃນຫໍເຕັນບ່ອນຊຸມນຸມ.
[4]ເຊື້ອສາຍຂອງໂກຮາດຕ້ອງຮັບຜິດຊອບສິ່ງທີ່ບໍຣິສຸດທີ່ສຸດທີ່ສະຫງວນໄວ້ສຳລັບເຮົາໃນຫໍເຕັນບ່ອນຊຸມນຸມ.

[5]ເມື່ອຄ້າຍພັກຕຽມທີ່ຈະເຄື່ອນຍ້າຍອອກໄປ, ອາໂຣນກັບພວກລູກຊາຍຂອງເຂົາຕ້ອງເຂົ້າໄປຂ້າງໃນຫໍເຕັນນັ້ນ,
ປົດຜ້າກັ້ງຊຶ່ງໃຊ້ກັ້ນອະພິສຸທິສະຖານຈາກວິສຸທິສະຖານແລະປົກຫີບແຫ່ງພັນທະສັນຍາດ້ວຍຜ້າກັ້ງນັ້ນ.
[6]ພວກເຂົາຕ້ອງປົກຫີບນັ້ນດ້ວຍໜັງທາຄັດຄຸມ. ພວກເຂົາຕ້ອງປູຜ້າສີຟ້າປົກຫີບນັ້ນໄວ້ ພວກເຂົາຕ້ອງສອດໄມ້ຄານຫາມເພື່ອຂົນຍ້າຍໄປ.
[7]ພວກເຂົາໄດ້ປູຜ້າສີຟ້າເທິງໂຕະເຂົ້າຈີ່ຕໍ່ໜ້າ ພວກເຂົາຕ້ອງ ວາງຈານ, ບ່ວງ, ຊາມ, ແລະໂຖສຳລັບເຢັນເທິງໂຕະນັ້ນ,
ເຂົ້າຈີ່ຕ້ອງມີຢູ່ເທິງໂຕະສະເໝີ.[8]ພວກເຂົາຕ້ອງປົກສິ່ງເຫລົ່ານັ້ນດ້ວຍຜ້າສີແດງເຂັ້ມແລະປົກທັບດ້ວຍໜັງທາຄັດອີກຊັ້ນໜຶ່ງ
ພວກເຂົາຕ້ອງສອດໄມ້ຄານຫາມເພື່ອຈະຂົນໂຕະນັ້ນໄປ.
[9]ພວກເຂົາຕ້ອງເອົາຜ້າສີຟ້າມາແລະ ປົກຫລັກຕະກຽງ, ພ້ອມກັບຕະກຽງ, ເຫລັກຄີບ, ຖາດ,
ແລະຖັງໃສ່ນໍ້າມັນສຳລັບຕະກຽງທຸກໜ່ວຍຂອງຫລັກຕະກຽງ.[10]ພວກເຂົາຕ້ອງວາງຫລັກຕະກຽງແລະສ່ວນປະກອບຂອງມັນທັງໝົດ
ໃນການຫໍ່ດ້ວຍໜັງທາຄັດແລະພວກເຂົາຕ້ອງວາງມັນເທິງຄານຫາມ.[11]ພວກເຂົາຕ້ອງປູຜ້າສີຟ້າເທິງແທ່ນບູຊາທອງຄຳ.
ພວກເຂົາຕ້ອງປົກມັນດ້ວຍການຫໍ່ດ້ວຍໜັງທາຄັດ, ແລະຈາກນັ້ນກໍສອດໄມ້ຄານຫາມ.
[12]ພວກເຂົາຕ້ອງເອົາຂອງໃຊ້ທຸກຢ່າງສຳລັບງານວິສຸທິສະຖານ ແລະຫໍ່ມັນດວ້ຍຜ້າສີຟ້າ. ພວກເຂົາຕ້ອງປົກມັນດ້ວຍໜັງທາຄັດ ແລະ
ວາງຂອງໃຊ້ນັ້ນໄວ້ເທິງຄານຫາມ.[13]ພວກເຂົາຕ້ອງເອົາຂີ້ເຖົ່າອອກຈາກແທ່ນບູຊາ ແລະປູຜ້າສີມ່ວງເທິງແທ່ນບູຊານັ້ນ.
[14]ພວກເຂົາຕ້ອງວາງຂອງໃຊ້ທຸກຢ່າງທີ່ພວກເຂົາໃຊ້ໃນງານກ່ຽວກັບແທ່ນບູຊາເທິງໂຄງຫາມສິ່ງຂອງເຫລົ່ານີ້ຄື ຖາດຮອງໄຟ, ຂໍເກາະ, ຊ້ວນ,
ຊາມ, ແລະ ຂອງໃຊ້ອື່ນໆ ທຸກຢ່າງສຳລັບແທ່ນບູຊາ. ພວກເຂົາຕ້ອງປົກແທ່ນບູຊາດ້ວຍໜັງທາຄັດ ແລະຈາກນັ້ນກໍສອດໄມ້ຄານຫາມ.
[15]ເມື່ອອາໂຣນແລະພວກລູກຊາຍຂອງເຂົາໄດ້ປົກຄຸມວິສຸທິສະຖານແລະຂອງໃຊ້ທຸກຢ່າງຂອງສະຖານທີ່ນັ້ນຮຽບຮ້ອຍແລ້ວ
ແລະໃນຕອນທີ່ຈະເຄື່ອນຍ້າຍຄ້າຍພັກອອກໄປຫລັງຈາກນັ້ນ ເຊື້ອສາຍຂອງໂກຮາດ, ຕ້ອງເຂົ້າມາຂົນຍ້າຍວິສຸທິສະຖານໄປ.
ຖ້າພວກເຂົາແຕະຕ້ອງຂອງໃຊ້ບໍຣິສຸດ, ພວກເຂົາຕ້ອງຕາຍ. ນີ້ເປັນງານຂອງເຊື້ອສາຍຂອງໂກຮາດຄືການຂົນເຄື່ອງໃຊ້ໃນເຕັນບ່ອນຊຸມນຸມ.
[16]ເອເລອາຊາລູກຊາຍຂອງອາໂຣນປະໂຣຫິດເປັນຜູ້ຄວບຄຸມການດູແລນໍ້າມັນສຳລັບຕະກຽງ, ເຄື່ອງຫອມ,
ແລະພືດຜົນເປັນເມັດເພື່ອຖວາຍບູຊາ, ແລະນໍ້າມັນເຈີມ, ເຂົາຄວບຄຸມການດູແລຫໍເຕັນສັກສິດທັງໝົດ ແລະທຸກສິ່ງທີ່ຢູ່ໃນຫໍເຕັນສັກສິດນັ້ນຄື,
ວິສຸທິສະຖານແລະຂອງໃຊ້ຂອງສະຖານທີ່ນັ້ນ.
[17]ພຣະຢາເວກ່າວກັບໂມເຊ ແລະອາໂຣນ. ພຣະອົງກ່າວວ່າ,[18]"ຢ່າໃຫ້ຕະກູນເຜົ່າຄົນໂກຮາດ, ຖືກຕັດຂາດໄປຈາກທ່າມກາງຄົນເລວີ.
[19]ຈົ່ງປົກປ້ອງພວກເຂົາ, ເພື່ອທີ່ຈະມີຊີວິດຢູ່ແລະ ບໍ່ຕາຍ, ໂດຍການເຮັດເຊັ່ນນີ້. ຕອນທີ່ພວກເຂົາໃກ້ສິ່ງບໍຣິສຸດ.
[20]ພວກເຂົາຕ້ອງບໍ່ເຂົ້າໄປຂ້າງໃນເພື່ອຈະເບິ່ງວິສຸທິສະຖານແມ່ນແຕ່ຊົ່ວອຶດໃຈດຽວ, ບໍ່ດັ່ງນັ້ນພວກເຂົາຕ້ອງຕາຍ ອາໂຣນແລະ
ພວກລູກຊາຍຂອງເຂົາຕ້ອງກຳນົດໃຫ້ຄົນໂກຮາດແຕ່ລະຄົນໃຫ້ເຮັດງານສະເພາະຂອງເຂົາ."
[21]ພຣະຢາເວບອກກັບໂມເຊອີກຄັ້ງ. ພຣະອົງບອກວ່າ,[22]"ຈົ່ງເຮັດສຳມະໂນຄົວຂອງເຊື້ອສາຍຂອງເກໂຊນດ້ວຍ, ຕາມຄອບຄົວພໍ່ຂອງພວກເຂົາ.
[23]ຈົ່ງນັບຄົນເຫລົ່ານັ້ນທີ່ມີອາຍຸ ສາມສິບປີ ເຖິງຫ້າສິບປີ. ຈົ່ງນັບພວກເຂົາທຸກຄົນທີ່ຈະເຂົ້າຮ່ວມກັບກຸ່ມຄົນທີ່ຈະບົວລະບັດ
ໜ້າທີ່ໃນຫໍເຕັນທີ່ຊຸມນຸມ.
[24]ນີ້ເປັນງານຂອງຕະກູນຂອງຄົນເກໂຊນ, ເມື່ອພວກເຂົາປະຕິບັດໜ້າທີ່ ແລະສິ່ງທີ່ພວກເຂົາຕ້ອງຂົນຍ້າຍ.
[25]ພວກເຂົາຕ້ອງຂົນຜ້າກັ້ງຂອງຫໍເຕັນສັກສິດ, ຫໍເຕັນປະຊຸມ, ແລະຜ້າທີ່ປົກຄຸມ ທີ່ມີການປົກຄຸມດ້ວຍໜັງທາຄັດທີ່ຢູ່ເທິງນັ້ນ,
ແລະຜ້າກັ້ງສຳລັບທາງເຂົ້າຂອງຫໍເຕັນປະຊຸມ.[26]ພວກເຂົາຕ້ອງຂົນຜ້າກັ້ງຂອງລານ, ຜ້າກັ້ງສຳລັບທາງເຂົ້າປະຕູຂອງປະຕູລານ
ທີ່ຢູ່ໃກ້ຫໍເຕັນແລະແທ່ນບູຊາ, ເຊືອກຂອງຜ້າກັ້ງເຫລົ່ານັ້ນແລະເຄື່ອງໃຊ້ທຸກຢ່າງສຳລັບການປະຕິບັດຫ້າທີ່ຂອງພວກເຂົາ,
ສິ່ງໃດກໍຕາມທີ່ຄວນຈະເຮັດກັບສິ່ງເຫລົ່ານີ້ພວກເຂົາຕ້ອງເຮັດສິ່ງນັ້ນ.
[27]ອາໂຣນແລະພວກລູກຊາຍຂອງເຂົາ ຕ້ອງກຳກັບຮັບຜິດຊອບປະຕິບັດໜ້າທີ່ທຸກຢ່າງຂອງເຊື້ອສາຍຂອງຄົນເກໂຊນ,
ໃນທຸກຢ່າງທີ່ພວກເຂົາຂົນຍ້າຍ, ແລະໃນການປະຕິບັດໜ້າທີ່ທຸກຢ່າງຂອງພວກເຂົາ.
ເຈົ້າຕ້ອງກຳນົດຄວາມຮັບຜິດຊອບທຸກຢ່າງຂອງພວກເຂົາໃຫ້ແກ່ພວກເຂົາ.
[28]ນີ້ເປັນການປະຕິບັດໜ້າທີ່ຂອງຕະກູນຂອງເຊື້ອສາຍຂອງຄົນເກໂຊນສຳລັບຫໍເຕັນປະຊຸມ.
ອີທາມາລູກຊາຍຂອງອາໂຣນປະໂຣຫິດຕ້ອງນຳພວກເຂົາໃນການປະຕິບັດໜ້າທີ່ຂອງພວກເຂົາ.
[29]ເຈົ້າຕ້ອງນັບເຊື້ອສາຍຂອງເມຣາຣີຕາມຕະກູນຂອງພວກເຂົາ ແລະລຽງລຳດັບພວກເຂົາຕາມຄອບຄົວຂອງບັນພະບູລຸດຂອງພວກເຂົາ.
[30]ຕັ້ງແຕ່ຄົນທີ່ມີອາຍຸ ສາມສິບປີ ເຖິງຫ້າສິບປີ ຈົ່ງນັບທຸກຄົນທີ່ຈະເຂົ້າຮ່ວມກຸ່ມແລະປະຕິບັດໜ້າທີ່ໃນເຕັນປະຊຸມ.
[31]ນີ້ເປັນຄວາມຮັບຜິດຊອບແລະງານຂອງພວກເຂົາໃນການປະຕິບັດໜ້າທີ່ທັງໝົດສຳລັບຫໍເຕັນປະຊຸມ.
ພວກເຂົາຕ້ອງຮັບຜິດຊອບໂຄງຮ່າງຂອງຫໍເຕັນສັກສິດ, ໄມ້ຄານ, ໄມ້ເສົາ, ແລະຕີນຮອງ.[32]ຕະຫລອດຈົນເສົາ, ໄມ້ຂອງລານຮອບຫໍເຕັນສັກສິດ,
ຕີນຮອງ, ຫລັກສຽບ, ແລະເຊືອກສຳລັບອ້ອມເດີ່ນກັບສ່ວນປະກອບຕ່າງໆຂອງຫໍເຕັນສັກສິດ,
ຈົ່ງຈົດລາຍຊື່ຂອງສິ່ງຂອງທີ່ພວກເຂົາຕ້ອງຂົນຍ້າຍ.
[33]ນີ້ເປັນງານຂອງຕະກູນຂອງເຊື້ອສາຍເມຣາຣີ ສິ່ງທີ່ພວກເຂົາເຮັດສຳລັບຫໍເຕັນປະຊຸມ ພາຍໃຕ້ການກຳກັບຮັບຜິດຊອບຂອງ
ອີທາມາລູກຊາຍຂອງອາໂຣນປະໂຣຫິດ."

 generated on Tue Jun 17 19:01:42 2025

[34]ໂມເຊ ແລະ ອາໂຣນ ແລະພວກຜູ້ນຳຊຸມຊົນນັ້ນໄດ້ນັບຄົນໂກຮາດ ຕາມຄອບຄົວບັນພະບູລຸດຂອງພໍ່.
[35]ພວກເຂົານັບຄົນເຫລົ່ານັ້ນທີ່ມີອາຍຸສາມສິບປີຂຶ້ນໄປຈົນເຖິງຫ້າສິບປີພວກເຂົານັບທຸກຄົນທີ່ຈະເຂົ້າຮ່ວມກັບກຸ່ມຄົນທີ່ຈະປະຕິບັດໜ້າທີ່ໃນເຕັນປະຊຸມ.
[36]ພວກເຂົານັບໄດ້2,750ຄົນຕາມຕະກຸນຂອງພວກເຂົາ.
[37]ໂມເຊແລະອາໂຣນ ນັບຜູ້ຊາຍທຸກຄົນໃນຕະກຸນແລະຄອບຄົວຂອງບັນພະບູລຸດຂອງຄົນໂກຮາດ ທີ່ປະຕິບັດໜ້າທີ່ໃນເຕັນປະຊຸມ.
ໃນການເຮັດເຊັ່ນນີ້, ພວກເຂົາເຊື່ອຟັງສິ່ງທີ່ພຣະຢາເວສັ່ງພວກເຂົາໃຫ້ເຮັດຜ່ານທາງໂມເຊ.
[38]ເຊື້ອສາຍຂອງເກໂຊນ ທີ່ນັບໃນຕະກຸນຂອງພວກເຂົາຕາມຄອບຄົວໃນບັນພະບູລຸດຂອງພວກເຂົາ,[39]ຕັ້ງແຕ່ອາຍຸ ສາມສິບປີເຖິງຫ້າສິບປີ,
ທຸກຄົນທີ່ເຂົ້າຮ່ວມກຸ່ມຄົນທີ່ຈະປະຕິບັດໜ້າທີ່ໃນຫໍເຕັນປະຊຸມ.[40]ຜູ້ຊາຍທຸກຄົນ, ທີ່ນັບຕາມຕະກຸນແລະຄອບຄົວບັນພະບູລຸດຂອງພວກເຂົາ,
ນັບໄດ້ 2,630 ຄົນ.
[41]ໂມເຊແລະອາໂຣນໄດ້ນັບຕາມຕະກຸນຂອງເຊື້ອສາຍເກໂຊນ ຜູ້ທີ່ຈະປະຕິບັດໜ້າທີ່ໃນຫໍເຕັນປະຊຸມ. ໃນການເຮັດເຊັ່ນນີ້,
ພວກເຂົາໄດ້ເຊື່ອຟັງສິ່ງທີ່ພຣະຢາເວຊົງສັ່ງໃຫ້ພວກເຂົາເຮັດຜ່ານທາງໂມເຊ.
[42]ເຊື້ອສາຍຂອງເມຣາຣີທີ່ນັບໄດ້ໃນຕະກຸນຂອງພວກເຂົາ ຕາມຄອບຄົວຂອງບັນພະບູລຸດຂອງພວກເຂົາ,[43]ຕັ້ງແຕ່ອາຍຸ ສາມສິບປີເຖິງຫ້າສິບປີ,
ທຸກຄົນທີ່ເຂົ້າຮວ່ມກຸ່ມທີ່ປະຕິບັດໜ້າທີ່ໃນເຕັນປະຊຸມ.[44]ຜູ້ຊາຍທຸກຄົນ, ທີ່ນັບຕາມຕະກຸນແລະຄອບຄົວຂອງບັນພະລູລຸດຂອງພວກເຂົາ, ນັບໄດ້
3,200ຄົນ.
[45]ໂມເຊແລະອາໂຣນນັບພວກຜູ້ຊາຍ, ເຫລົ່ານີ້ທຸກຄົນທີ່ເປັນເຊື້ອສາຍຂອງເມຣາຣີ. ໃນການເຮັດເຊັ່ນນີ້,
ພວກເຂົາເຊື່ອຟັງສິ່ງທີ່ພຣະຢາເວຊົງສັ່ງໃຫ້ພວກເຂົາເຮັດຜ່ານທາງໂມເຊ.
[46]ດັ່ງນັ້ນໂມເຊ, ອາໂຣນ, ແລະພວກຜູ້ນຳຂອງອິດສະຣາເອນ ຈຶ່ງນັບຄົນເລວີທັງຫມົດຕາມຕະກຸນຂອງພວກເຂົາ
ໃນຄອບຄົວຂອງບັນພະບູລຸດຂອງພວກເຂົາ.[47]ຕັ້ງແຕ່ອາຍຸ ສາມສິບປີເຖິງຫ້າສິບປີ, ພວກເຂົານັບທຸກຄົນທີ່ຈະເຮັດວຽກໃນຫໍເຕັນສັກສິດ,
ແລະຜູ້ທີ່ຈະຂົນຍ້າຍແລະຮັບຜິດຊອບສິ່ງຂອງຕ່າງໆໃນຫໍເຕັນປະຊຸມ.[48]ພວກເຂົານັບໄດ້ 8,580 ຄົນ.
[49]ຕາມທີ່ພຣະຢາເວໄດ້ສັ່ງຜ່ານ, ໂມເຊນັບຜູ້ຊາຍ, ແຕ່ລະຄົນຕໍ່ໄປຕາມປະເພດຂອງງານທີ່ເຂົາໄດ້ຮັບມອບຫມາຍໃຫ້ເຮັດ.
ເພິ່ນນັບຜູ້ຊາຍແຕ່ລະຄົນຕາມໜ້າທີ່ຂອງຄວາມຮັບຜິດຊອບທີ່ພວກເຂົາຮັບໄວ້. ໃນການເຮັດເຊັ່ນນີ້,
ພວກເຂົາໄດ້ເຊື່ອຟັງຕາມທີ່ພຣະຢາເວຊົງສັ່ງພວກເຂົາໃຫ້ເຮັດຜ່ານທາງໂມເຊ.


generated on Tue Jun 17 19:01:42 2025

# 5

[1]ພຣະຢາເວບອກໂມເຊ. ພຣະອົງບອກວ່າ, [2]"ຈົ່ງສັ່ງຄົນອິດສະຣາເອນໃຫ້ແຍກທຸກຄົນທີ່ຕິດເຊື້ອໂລກຜິວຫນັງ, ແລະທຸກຄົນທີ່ມີສິ່ງໄຫລອອກມາ,
ແລະຄົນໃດກໍຕາມທີ່ເປັນມົນທິນຈາກການແຕະຕ້ອງຊາກສົບອອກໄປຈາກຄ້າຍພັກ. [3]ບໍ່ວ່າຊາຍຫລືຍິງ,
ເຈົ້າຕ້ອງແຍກພວກເຂົາອອກຈາກຄ້າຍພັກ. ພວກເຂົາຕ້ອງບໍ່ເຮັດໃຫ້ຄ້າຍພັກມີມົນທິນ,
ເພາະເຮົາສະຖິດຢູ່ໃນຄ້າຍພັກນີ້." [4]ຄົນອິດສະຣາເອນເຮັດຕາມນັ້ນ. ພວກເຂົາແຍກຄົນເຫລົ່ານັ້ນໄປຈາກຄ້າຍພັກ,
ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ. ຄົນອິດສະຣາເອນກໍເຊື່ອຟັງພຣະຢາເວ.

[5]ພຣະຢາເວບອກໂມເຊ. ພຣະອົງບອກວ່າ, [6]ເມື່ອຜູ້ຊາຍຫລືຜູ້ຍິງໄດ້ເຮັດບາບໃດໆ ຢ່າງທີ່ຜູ້ໃດຜູ້ຫນຶ່ງເຮັດບາບຕໍ່ກັນ,
ແລະເປັນການບໍ່ສັດຊື່ຕໍ່ເຮົາ, ຄົນນັ້ນກໍມີຄວາມຜິດ. [7]ຈາກນັ້ນເຂົາຕ້ອງສາລະພາບບາບທີ່ເຂົາໄດ້ເຮັດ.
ເຂົາຕ້ອງໃຊ້ແທນຄືນແກ່ການເຮັດຜິດຂອງເຂົາ ແລະເພີ່ມຄ່າອີກຫນຶ່ງໃນຫ້າ. ເຂົາຕ້ອງໃຫ້ຄ່າໃຊ້ແທນນັ້ນຕໍ່ຄົນທີ່ເຂົາເຮັດຜິດ.
[8]ແຕ່ຖ້າຄົນທີ່ເຂົາໄດ້ກະທໍາຜິດບໍ່ມີພີ່ນ້ອງໃກ້ຊິດ ທີ່ຈະຮັບຄ່າໃຊ້ແທນຄືນ, ຄ່າການເຮັດຜິດຂອງເຂົາໃຫ້ກັບເຮົາຜ່ານທາງປະໂຣຫິດ,
ພ້ອມກັບລູກແກະທີ່ຈະລົບບາບໃຫ້ກັບຕົວເຂົາເອງ. [9]ເຄື່ອງບູຊາຂອງທຸກຄົນຈະເປັນຂອງຄົນອິດສະຣາເອນ, ບັນດາສິ່ງທີ່ຄົນອິດສະຣາເອນ,
ແຍກໄວ້ແລະນໍາມາໃຫ້ປະໂຣຫິດກໍຈະເປັນຂອງເຂົາ. [10]ເຄື່ອງບູຊາຂອງທຸກຄົນຈະເປັນຂອງປະໂຣຫິດ; ຖ້າຄົນໃດມອບສິ່ງໃດໆໃຫ້ແກ່ປະໂຣຫິດ,
ສິ່ງນັ້ນກໍຈະເປັນຂອງເຂົາ."
[11]ພຣະອົງບອກວ່າ, [12]"ຈົ່ງເວົ້າກັບຄົນອິດສະຣາເອນ. ຈົ່ງບອກພວກເຂົາວ່າ,
'ສົມມຸດວ່າເມຍຂອງຊາຍຄົນຫນຶ່ງນອກໃຈແລະເຮັດບາບຕໍ່ຜົວຂອງນາງ.
[13]ແລ້ວສົມມຸດວ່າຊາຍອີກຄົນຫນຶ່ງຫລັບນອນກັບນາງ. ໃນກໍລະນີນັ້ນ, ນາງກໍເປັນມົນທິນ. ເຖິງແມ່ນວ່າຜົວຂອງນາງຈະບໍ່ເຫັນຫລືບໍ່ຮູ້ເລື່ອງນີ້,
ແລະເຖິງແມ່ນວ່າບໍ່ມີໃຜຈັບໄດ້ວ່ານາງໄດ້ເຮັດເຊັ່ນນັ້ນ ແລະບໍ່ມີຜູ້ໃດເປັນພະຍານປັກປໍານາງ, [14]ແຕ່ຢ່າງໃດກໍຕາມ,
ວິນຍານແຫ່ງຄວາມຫຶງຫວງຍັງຄອຍເຕືອນຜົວວ່າ ເມຍຂອງເຂົາເປັນມົນທິນ. ຢ່າງໃດກໍດີ,
ວິນຍານແຫ່ງຄວາມຫຶງຫວງອາດມາເຫິງຊາຍຄົນນັ້ນກໍໄດ້ ເຖິງວ່າເມຍຂອງເຂົາບໍ່ໄດ້ເປັນມົນທິນ.
[15]ໃນກໍລະນີເຊັ່ນນີ້, ຊາຍຄົນນັ້ນຄວນພາເມຍຂອງເຂົາໄປຫາປະໂຣຫິດ. ແລະຜົວຕ້ອງນໍາເຄື່ອງດື່ມບູຊາສໍາລັບນາງມາດ້ວຍ.
ເຂົາຕ້ອງນໍາແປ້ງເຂົ້າບາເລຫນຶ່ງສ່ວນສິບມາດ້ວຍ.
ເຂົາຕ້ອງບໍ່ໃສ່ນໍ້າມັນຫລືກໍາຍານເທິງແປ້ງນັ້ນເພາະແປ້ງນັ້ນເປັນພືດຜົນບູຊາແຫ່ງຄວາມຫຶງຫວງ,
ພືດຜົນບູຊານັ້ນອາດຈະເປັນຕົວຊີ້ໃຫ້ເຫັນບາບໄດ້.
[16]ປະໂຣຫິດຕ້ອງພານາງມາໃກ້ແລະໃຫ້ນາງຢືນຢູ່ຕໍ່ຫນ້າພຣະຢາເວ.
[17]ປະໂຣຫິດຕ້ອງນໍາໂຖທີ່ມີນໍ້າບໍລິສຸດມາແລະເອົາຝຸ່ນຈາກພື້ນຂອງຫໍເຕັນສັກສິດ. ເຂົາຕ້ອງໃສ່ຝຸ່ນລົງໄປໃນນໍ້ານັ້ນ.
[18]ປະໂຣຫິດຈະໃຫ້ຍິງນັ້ນຢືນຢູ່ຕໍ່ຫນ້າພຣະຢາເວ ແລະ ເຂົາຈະແກ້ມັດຜົມເທິງຫົວຂອງນາງ.
ເຂົາຈະວາງພືດຜົນບູຊາແຫ່ງການລະນຶກໄວ້ໃນມືຂອງນາງ, ທີ່ເປັນພືດຜົນບູຊາແຫ່ງຄວາມສົງໃສ.
ປະໂຣຫິດຈະຖືນໍ້າຂົມທີ່ນໍາຄໍາສາບແຊ່ງມາໄວ້ໃນມືຂອງເຂົາ. [19]ປະໂຣຫິດຈະໃຫ້ຍິງນັ້ນຢູ່ພາຍໃຕ້ຄໍາສາບານ ແລະບອກກັບນາງວ່າ,
'ຖ້າບໍ່ມີຊາຍອື່ນມີເພດສໍາພັນກັບເຈົ້າ, ແລະເຈົ້າບໍ່ໄດ້ຫລົງຜິດແລະເຮັດໃຫ້ເປັນມົນທິນ, ແລ້ວເຈົ້າຈະພົ້ນຈາກນໍ້າຂົມທີ່ນໍາຄໍາສາບແຊ່ງມານີ້.
[20]ແຕ່ຖ້າເຈົ້າ, ເປັນຍິງທີ່ຢູ່ພາຍໃຕ້ຜົວໄດ້ຫລົງຜິດໄປ, ຖ້າເຈົ້າເປັນມົນທິນ, ແລະຖ້າມີຊາຍອື່ນໄດ້ຫລັບນອນກັບເຈົ້າ, [21]ຈາກນັ້ນ,
(ປະໂຣຫິດຕ້ອງເຮັດໃຫ້ນາງໃຫ້ຄໍາສາບານ ເພື່ອທີ່ຈະນໍາຄໍາສາບແຊ່ງລົງມາເທິງນາງ, ແລະຈາກນັ້ນເຂົາຕ້ອງເວົ້າກັບຍິງຄົນນີ້ຕໍ່ໄປວ່າ)
'ພຣະຢາເວຈະຊົງເຮັດໃຫ້ເຈົ້າຕົກຢູ່ໃນຄໍາສາບແຊ່ງເພື່ອໃຫ້ຊຸມຊົນຂອງເຈົ້າເຫັນວ່າເປັນເຊັ່ນນັ້ນ. ສິ່ງນີ້ຈະເກີດຂຶ້ນ
ຖ້າພຣະຢາເວຊົງເຮັດໃຫ້ກົກຂາຂອງເຈົ້າລີບໄປແລະເຮັດໃຫ້ທ້ອງຂອງເຈົ້າໄຄ່. [22]ນໍ້າທີ່ນໍາຄໍາສາບແຊ່ງມາກໍຈະເຂົ້າໄປໃນກະເພາະຂອງເຈົ້າ
ແລະເຮັດໃຫ້ທ້ອງຂອງເຈົ້າໄຄ່ ແລະເຮັດໃຫ້ກົກຂາຂອງເຈົ້າລີບໄປ.' ຍິງຄົນນັ້ນຕ້ອງຕອບວ່າ, 'ແມ່ນ, ຂໍໃຫ້ສິ່ງນັ້ນເກີດຂຶ້ນຖ້າຂ້ານ້ອຍຜິດ.'
[23]ປະໂຣຫິດຕ້ອງຂຽນຄໍາສາບແຊ່ງເຫລົ່ານັ້ນເທິງຫນັງສືມ້ວນ, ແລະຈາກນັ້ນເຂົາຕ້ອງລ້າງຄໍາສາບແຊ່ງທີ່ຂຽນໄວ້ລົງໄປໃນນໍ້າຂົມນັ້ນ.
[24]ປະໂຣຫິດຕ້ອງເຮັດໃຫ້ຍິງນັ້ນກິນນໍ້າຂົມທີ່ນໍາຄໍາສາບແຊ່ງມາ. ນໍ້າທີ່ນໍາຄໍາສາບແຊ່ງມາຈະເຂົ້າໄປໃນຕົວນາງ ແລະກາຍເປັນລົດຂົມ.
[25]ປະໂຣຫິດຕ້ອງເອົາພືດຜົນບູຊາແຫ່ງຄວາມຫຶງຫວງມາຈາກມືຂອງຍິງນັ້ນ. ເຂົາຕ້ອງຍົກພືດຜົນບູຊານັ້ນຂຶ້ນຕໍ່ຫນ້າພຣະຢາເວ
ແລະນໍາພືດຜົນບູຊານັ້ນໄປທີ່ແທນບູຊາ. [26]ປະໂຣຫິດຕ້ອງເອົາທັນຍະບູຊາມາຫນຶ່ງກໍາມືທີ່ເປັນຕົວແທນເຄື່ອງບູຊາ, ແລະ ເຜົາເທິງແທ່ນບູຊາ
ແລ້ວເຂົາຕ້ອງໃຫ້ຍິງນັ້ນກິນນໍ້າຂົມ.
[27]ເມື່ອເຂົາໃຫ້ນາງດື່ມນໍ້ານັ້ນແລ້ວ, ຖ້ານາງເປັນມົນທິນ ເພາະນາງເຮັດຜິດຕໍ່ຜົວຂອງນາງ,
ແລ້ວນໍ້າທີ່ນໍາຄໍາສາບແຊ່ງກໍຈະເຂົ້າໄປໃນຕົວນາງແລະກາຍເປັນລົດຂົມ. ທ້ອງຂອງນາງຈະໄຄ່ ແລະກົກຂາຂອງນາງຈະລີບໄປ.
ຍິງນັ້ນຈະຖືກສາບແຊ່ງທ່າມກາງຊຸມຊົນຂອງນາງ. [28]ແຕ່ຖ້ານາງບໍ່ເປັນມົນທິນ ແລະ ນາງສະອາດແລ້ວນາງກໍຕ້ອງພົ້ນຄວາມຜິດ
ນາງຈະຕັ້ງຄັນກໍໄດ້.
[29]ນີ້ເປັນກົດເລື່ອງຄວາມຫຶງຫວງ. ກົດນີ້ເປັນກົດສໍາລັບຜູ້ຍິງທີ່ນອກໃຈຜົວຂອງຕົນແລະເປັນມົນທິນ.
[30]ກົດນີ້ເປັນກົດສໍາລັບຜູ້ຊາຍທີ່ມີວິນຍານແຫ່ງຄວາມຫຶງຫວງເມຍຂອງເຂົາ. ເຂົາຕ້ອງພາຍິງນັ້ນໄປຢູ່ຕໍ່ຫນ້າພະຢາເວ,
ແລະປະໂຣຫິດຕ້ອງເຮັດທຸກຢ່າງກັບນາງຕາມທີ່ກົດເລື່ອງຄວາມຫຶງຫວງໄດ້ອະທິບາຍໄວ້.
[31]ຊາຍຄົນນັ້ນຈະພົ້ນຈາກຄວາມຜິດໃນການພາເມຍຂອງເຂົາໄປຫາປະໂຣຫິດ. ຍິງຄົນນັ້ນຕ້ອງຮັບຄວາມຜິດທີ່ນາງໄດ້ເຮັດ."


generated on Tue Jun 17 19:01:42 2025

# 6

[1]ພຣະຢາເວໄດ້ບອກກັບໂມເຊ. ພຣະອົງບອກວ່າ,[2]"ຈົ່ງເວົ້າກັບຄົນອິດສະຣາເອນ. ຈົ່ງບອກພວກເຂົາວ່າ,
'ເມື່ອຜູ້ຊາຍຫລືຜູ້ຍິງຄົນໃດໄດ້ແຍກຕົວເອງອອກມາ ແດ່ພຣະຢາເວດ້ວຍການອຸທິດຕົວພິເສດເປັນນາຊີຣີ,
[3]ເຂົາຕ້ອງເອົາຕົວເອງອອກຈາກເຫລົ້າອະງຸ່ນແລະເຄື່ອງດື່ມມຶນເມົາ. ເຂົາຕ້ອງບໍ່ດື່ມນໍ້າສົ້ມທີ່ເຮັດມາຈາກເຫົ້າອະງຸ່ນຫລືຈາກເຄື່ອງດື່ມມຶນເມົາ.
ເຂົາຕ້ອງບໍ່ດື່ມນໍ້າອະງຸ່ນຫລືບໍ່ກິນຫມາກອະງຸ່ນສົດຫລືຫມາກອະງຸ່ນແຫ້ງເລີຍ.
[4]ຕະຫລອດເວລາທີ່ເຂົາແຍກຕົວອອກມາເພື່ອເຮົາເຂົາຕ້ອງບໍ່ກິນສິ່ງໃດທີ່ເຮັດມາຈາກຕົ້ນອະງຸ່ນລວມທັງທຸກຢ່າງທີ່ເຮັດມາຈາກເມັດຈົນເຖິງເປືອກຂອງມັນ.

[5]ຕະຫລອດຊ່ວງເວລາຂອງການອຸທິດຕົນໃນການແຍກຕົວອອກມາຂອງເຂົາ,
ຫ້າມໃຊ້ມີດແຖເທິງຫົວຂອງເຂົາຈົນກວ່າເວລາຂອງການແຍກຕົວອອກມາຂອງເຂົາ ແດ່ພຣະຢາເວຄົບກໍາຫນົດ. ເຂົາຕ້ອງແຍກຕົວອອກມາ
ແດ່ພຣະຢາເວ. ເຂົາຕ້ອງຈົ່ງຜົມຍາວເທິງຫົວຂອງເຂົາ.
[6]ຕະຫລອດຊ່ວງລະຫວ່າງເວລາຂອງການແຍກຕົວເອງອອກມາແດ່ພຣະຢາເວ, ເຂົາຕ້ອງບໍ່ເຂົ້າມາໃກ້ຊາກສົບ.
[7]ເຂົາຕ້ອງບໍ່ເຮັດໃຫ້ຕົວເອງເປັນມົນທິນເນື່ອງຈາກ ພໍ່, ແມ່, ນ້ອງຊາຍ, ຫລື ນ້ອງສາວຂອງເຂົາ, ຖ້າຫາກພວກເຂົາຕາຍ.
ນີ້ເປັນເພາະເຂົາຖືກແຍກໄວ້ແດ່ພຣະເຈົ້າແລ້ວ, ຕາມທີ່ທຸກຄົນເຫັນໄດ້ຈາກຜົມຍາວຂອງເຂົາ.
[8]ຕະຫລອດຊ່ວງເວລາການແຍກອອກມາຂອງເຂົາ, ເຂົາບໍຣິສຸດ, ແລະ ສະຫງວນໄວ້ແດ່ພຣະຢາເວ.
[9]ແຕ່ຫາກມີຄົນມາຕາຍຢ່າງກະທັນຫັນຢູ່ໃກ້ເຂົາພໍດີ ແລະເຮັດໃຫ້ຫົວຂອງເຂົາທີ່ໄດ້ຮັບການຊໍາລະເປັນມົນທິນ,
ແລ້ວເຂົາກໍຕ້ອງແຖຫົວໃນວັນຊໍາລະຕົວຂອງເຂົາຄືໃນວັນທີເຈັດ ເຂົາຕ້ອງແຖຫົວ.
[10]ວັນທີແປດ ເຂົາຕ້ອງນໍານົກເຂົາສອງໂຕຫລືນົກກາງແກນຸ່ມສອງໂຕມາຫາປະໂຣຫິດທີ່ທາງເຂົ້າເຕັນປະຊຸມ.
[11]ປະໂຣຫິດຕ້ອງຖວາຍນົກໂຕຫນຶ່ງເປັນເຄື່ອງບູຊາລຶບລ້າງບາບ ແລະອີກໂຕຫນຶ່ງເປັນເຄື່ອງເຜົາບູຊາ ນົກເຫລົ່ານີ້ຈະລຶບລ້າງບາບໃຫ້ກັບເຂົາ
ເພາະເຂົາໄດ້ເຮັດບາບຈາກການຢູ່ໃກ້ຊາກສົບ, ເຂົາຕ້ອງສໍາລະຫົວຂອງເຂົາໃຫ້ບໍລິສຸດອີກຄັ້ງໃນວັນນັ້ນ.
[12]ເຂົາຕ້ອງແຍກຕົວເອງອອກຈາກພຣະຢາເວໃນຊ່ວງວັນຊໍາລະຕົວຂອງເຂົາ.
ເຂົາຕ້ອງນໍາລູກແກະໂຕຜູ້ໂຕຫນຶ່ງທີ່ມີອາຍຸຫນຶ່ງປີມາເປັນເຄື່ອງບູຊາ. ແຫ່ງການເຮັດຜິດຈໍານວນວັນກ່ອນທີ່ເຂົາເຮັດໃຫ້ຕົວເອງເປັນມົນທິນ,
ຕ້ອງຖືວ່າບໍ່ນັບ ເພາະການແຍກຕົວອອກມາເປັນມົນທິນ.
[13]ເຂົາຕ້ອງຖືກນໍາມາຍັງທາງເຂົ້າຂອງເຕັນປະຊຸມ.[14]ເຂົາຕ້ອງຖວາຍເຄື່ອງບູຊາຂອງເຂົາແດ່ພຣະຢາເວ.
ເຂົາຕ້ອງຖວາຍລູກແກະຜູ້ໂຕຫນຶ່ງທີ່ມີອາຍຸຫນຶ່ງປີ ແລະບໍ່ມີຕໍານິເປັນເຄື່ອງເຜົາບູຊາ.
ເຂົາຕ້ອງນໍາລູກແກະໂຕແມ່ຫນຶ່ງໂຕທີ່ມີອາຍຸຫນຶ່ງປີທີ່ບໍ່ມີຕໍານິເປັນເຄື່ອງບູຊາລຶບລ້າງບາບ.
ເຂົາຕ້ອງນໍາແກະໂຕຜູ້ໂຕຫນຶ່ງທີ່ບໍ່ມີຕໍານິມາຖວາຍເປັນສານບູຊາ.[15]ເຂົາຕ້ອງນໍາເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງມາກະຕ່າຫນຶ່ງ,
ເຂົ້າຈີ່ທີ່ເຮັດຈາກເນື້ອແປ້ງລະອຽດປະສົມດ້ວຍນໍ້າມັນ, ເຂົ້າຈີ່ແຜ່ນທີ່ບໍ່ມີເຊື້ອທາດ້ວຍນໍ້າມັນ, ພ້ອມກັບພືດຜົນບູຊາແລະເຄື່ອງດື່ມບູຊາ.
[16]ປະໂຣຫິດຕ້ອງຖວາຍສິ່ງເຫລົ່ານີ້ຕໍ່ຫນ້າພຣະຢາເວ. ເຂົາຕ້ອງຖວາຍເຄື່ອງບູຊາລົບລ້າງບາບແລະເຄື່ອງເຜົາບູຊາ.
[17]ເຂົາຕ້ອງຖວາຍແກະໂຕຜູ້ໂຕຫນຶ່ງເປັນເຄື່ອງບູຊາ, ພ້ອມກັບກະຕ່າເຂົ້າຈີ່ບໍ່ມີເຊື້ອແປ້ງ, ແລະສານບູຊາແດ່ພຣະຢາເວ.
ປະໂຣຫິດຕ້ອງຖວາຍພືດຜົນບູຊາແລະເຄື່ອງດື່ມບູຊາດ້ວຍ.
[18]ຜູ້ເປັນນາຊີຣີຕ້ອງແຖຫົວຂອງເຂົາທີ່ສະແດງໃຫ້ເຫັນເຖິງການແຍກຕົວອອກມາແດ່ພຣະເຈົ້າ ທີ່ທາງເຂົ້າເຕັນປະຊຸມ.
ເຂົາຕ້ອງເອົາເສັ້ນຜົມຈາກຫົວຂອງເຂົາແລະໃສ່ລົງເທິງໄຟທີ່ຢູ່ພາຍໃຕ້ການຖວາຍເຄື່ອງບູຊາຂອງສັນຕິບູຊາ.
[19]ເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງຫນຶ່ງກ້ອນມາຈາກກະຕ່າ, ແລະເຂົ້າຈີ່ແຜ່ນທີ່ບໍ່ມີເຊື້ອແປ້ງຫນຶ່ງແຜ່ນມາ.
ເຂົາຕ້ອງວາງສິ່ງເຫລົ່ານີ້ໄວ້ໃນມືຂອງນາຊີຣີຄົນນັ້ນ ຫລັງຈາກທີ່ເຂົາໄດ້ແຖຫົວຂອງເຂົາເພື່ອສະແດງການແຍກຕົວອອກມາແລ້ວ.
[20]ປະໂຣຫິດຕ້ອງແກວ່ງເຄື່ອງບູຊາເຫລົ່ານັ້ນເປັນເຄື່ອງບູຊາຕໍ່ຫນ້າພຣະຢາເວ, ສ່ວນທີ່ບໍຣິສຸດສໍາລັວປະໂຣຫິດ,
ພ້ອມກັບຊີ້ນຫນ້າເອິກທີ່ໄດ້ແກວ່ງຖວາຍແລະຊີ້ນກົກຂາທີ່ໄດ້ຖວາຍແລ້ວສໍາລັບປະໂຣຫິດ. ຫລັງຈາກນັ້ນ,
ນາຊີຣີຄົນນັ້ນກໍຈະດື່ມເຫລົ້າອະງຸ່ນໄດ້.
[21]ນີ້ເປັນກົດສໍາລັບນາຊີຣີຜູ້ທີ່ປະຕິຍານເຄື່ອງບູຊາຂອງເຂົາແດ່ພຣະຢາເວ ສໍາລັບການແຍກຕົວອອກມາຂອງເຂົາ.
ສິ່ງອັນໃດກໍຕາມທີ່ເຂົາຖວາຍໄດ້, ເຂົາຕ້ອງຖືຮັກສາພາລະຜູກພັນຕາມຄໍາປະຕິຍານທີ່ເຂົາໄດ້ກ່າວໄວ້,
ເພື່ອທີ່ຈະຮັກສາສັນຍາຕາມກົດສໍາລັບນາຊີຣີທີ່ໄດ້ບອກໄວ້.'"
[22]ພຣະຢາເວໄດ້ບອກກັບໂມເຊ. ອີກຄັ້ງຫນຶ່ງ ພຣະອົງບອກວ່າ,[23]ຈົ່ງເວົ້າກັບອາໂຣນແລະພວກລູກຊາຍຂອງເຂົາ. ບອກວ່າ,
'ພວກເຈົ້າຕ້ອງອວຍພອນຄົນອິດສະຣາເອນຢ່າງນີ້. ພວກເຈົ້າຕ້ອງບອກກັບພວກເຂົາວ່າ,
[24]"ຂໍພຣະຢາເວຊົງອວຍພອນແລະປົກປັກຮັກສາພວກເຈົ້າ.
[25]ຂໍພຣະຢາເວຊົງໃຫ້ພຣະພັກຂອງພຣະອົງສ່ອງແສງເທິງພວກເຈົ້າແລະຊົງເມດຕາກາລຸນາແກ່ພວກເຈົ້າ.
[26]ຂໍພຣະຢາເວຫລຽວເບິ່ງພວກເຈົ້າດວ້ຍຄວາມເມດຕາເອັນດູ ແລະປະທານສັນຕິສຸກແກ່ພວກເຈົ້າ.'"[27]ໃນການອວຍພອນເຊັ່ນນີ້
ພວກເຂົາຕ້ອງເອີ້ນນາມຂອງເຮົາຕໍ່ຄົນອິດສະຣາເອນ. ແລ້ວເຮົາຈະອວຍພອນພວກເຂົາ."

 generated on Tue Jun 17 19:01:42 2025

7 [1]ໃນວັນທີໂມເຊໄດ້ຕັ້ງຫໍເຕັນສັກສິດສຳເລັດນັ້ນ, ເພິ່ນໄດ້ເຈີມຫໍເຕັນສັກສິດແລະແຍກຫໍເຕັນນັ້ນແດ່ພຣະຢາເວ,
ພ້ອມກັບເຄື່ອງໃຊ້ທຸກຢ່າງຂອງຫໍເຕັນນັ້ນ. ເພິ່ນໄດ້ເຮັດການເຈີມແທ່ນບູຊາແລະຂອງໃຊ້ທຸກຢ່າງຂອງແທ່ນບູຊານັ້ນເຊັ່ນດຽວກັນ.
ເພິ່ນເຈີມສິ່ງເຫລົ່ານັ້ນແລະແຍກໄວ້ແດ່ພຣະຢາເວ.[2]ໃນວັນນັ້ນ, ບັນດາຜູ້ນຳຂອງອິດສະຣາເອນ,
ພວກຫົວຫນ້າຄອບຄົວຂອງບັນພະບູລຸດຂອງພວກເຂົາ, ໄດ້ຖວາຍເຄື່ອງບູຊາ ຄົນເຫລົ່ານີ້ເປັນຜູ້ນຳເຜົ່າຕ່າງໆ.
ພວກເຂົາໄດ້ໄດ້ຮັບຜິດຊອບໃນການນັບຈຳນວນຄົນໃນການເຮັດສຳມະໂນຄົວ.
[3]ພວກເຂົານຳເຄື່ອງຖວາຍບູຊາຂອງພວກເຂົາມາຕໍ່ຫນ້າພຣະຢາເວ. ພວກເຂົານຳກວຽນຫົກລຳແລະງົວສິບສອງໂຕມາ.
ພວກເຂົານຳກວຽນມາຫນຶ່ງລຳຕໍ່ຜູ້ນຳສອງຄົນ, ແລະຜູ້ນຳແຕ່ລະຄົນໄດ້ນຳງົວມາຜູ້ລະຫນຶ່ງໂຕ.
ພວກເຂົາໄດ້ຖວາຍສິ່ງເຫລົ່ານີ້ຕໍ່ຫນ້າຫໍເຕັນສັກສິດ.

[4]ພຣະອົງບອກວ່າ,[5]"ຈົ່ງຮັບບັນດາເຄື່ອງບູຊາຈາກພວກເຂົາ ແລະໃຊ້ເຄື່ອງບູຊາເຫລົ່ານັ້ນສຳລັບງານໃນເຕັນປະຊຸມ.
ຈົ່ງມອບເຄື່ອງບູຊາເຫລົ່ານັ້ນໃຫ້ກັບຄົນເລວີ, ໃຫ້ກັບແຕ່ລະຄົນຕາມທີ່ຕ້ອງການໃຊ້ສິ່ງເຫລົ່ານັ້ນໃນງານຂອງເຂົາ."
[6]ໂມເຊຈຶ່ງຮັບກວຽນແລະຝູງງົວມາ, ແລະເພິ່ນໄດ້ມອບເຄື່ອງບູຊາເຫລົ່ານັ້ນໃຫ້ກັບຄົນເລວີ.
[7]ເພິ່ນໄດ້ມອບກວຽນສອງລຳແລະງົວສີ່ໂຕໃຫ້ກັບເຊື້ອສາຍຂອງເກີໂຊນ, ເພາະເປັນສິ່ງທີ່ຕ້ອງການໃຊ້ໃນການເຮັດວຽກຂອງພວກເຂົາ.
[8]ເພິ່ນໄດ້ມອບກວຽນສີ່ລຳແລະງົວແປດໂຕໃຫ້ກັບເຊື້ອສາຍຂອງເມຣາຣີ, ໃຫ້ຢູ່ໃນຄວາມຮັບຜິດຊອບຂອງ
ອີທາມາລູກຊາຍຂອງອາໂຣນປະໂຣຫິດ. ເພິ່ນໄດ້ເຮັດເຊັ່ນນີ້ ເພາະເປັນສິ່ງທີ່ຕ້ອງການໃຊ້ໃນການເຮັດວຽກຂອງພວກເຂົາ.
[9]ແຕ່ທ່ານບໍ່ໄດ້ມອບສິ່ງໃດຈາກສິ່ງເຫລົ່ານັ້ນໃຫ້ກັບເຊື້ອສາຍຂອງໂກຮາດເລີຍ, ເພາະວຽກຂອງພວກເຂົາເປັນວຽກກ່ຽວກັບສິ່ງຕ່າງໆ
ຊຶ່ງເປັນຂອງພຣະຢາເວ ທີ່ພວກເຂົາຈະແບກໄວ້ເທິງບ່າພວກເຂົາເອງ.
[10]ບັນດາຜູ້ນຳໄດ້ຖວາຍສິ່ງຂອງຕ່າງໆ ຂອງພວກເຂົາສຳລັບການມອບຖວາຍແທ່ນບູຊາ ໃນວັນທີ່ໂມເຊ ໄດ້ເຈີມແທ່ນບູຊາ.
ພວກຜູ້ນຳໄດ້ຖວາຍບັນດາເຄື່ອງບູຊາຂອງພວກເຂົາຕໍ່ຫນ້າແທ່ນບູຊາ.[11]ພຣະຢາເວໄດ້ບອກກັບໂມເຊວ່າ,
"ຜູ້ນຳແຕ່ລະຄົນຕ້ອງຖວາຍເຄື່ອງບູຊາສຳລັບການມອບຖວາຍແທ່ນບູຊາໃນວັນຂອງເຂົາເອງ."
[12]ມື້ທຳອິດ, ນາໂຊນລູກຊາຍຂອງອາມີນາດາບ, ແຫ່ງເຜົ່າຢູດາ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[13]ເຄື່ອງບູຊາຂອງເຂົາຄື ຈານເງິນຫນຶ່ງໃບຫນັກ
130 ເຊເຂ ແລະຊາມເງິນຫນຶ່ງໃບຫນັກ 70ເຊເຂ ຕາມອັດຕາຊັ່ງສຳນັກນະມັດສະການ.
ພາຊະນະທັງສອງໃບນີ້ເຕັມດ້ວຍແປ້ງຢ່າງດີປົນກັບນ້ຳມັນເພື່ອເປັນການຖວາຍພືດຜົນບູຊາ.[14]ເຂົາໄດ້ຖວາຍຈານຄຳຫນຶ່ງໃບທີ່ຫນັກ 10 ເຊເຂ
ແລະເຕັມດ້ວຍເຄື່ອງຫອມ.
[15]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີຫນຶ່ງໂຕເປັນເຄື່ອງເຜົາບູຊາ.
[16]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[17]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ,
ແບ້ຜູ້ຫ້າໂຕແລະລູກແກະໂຕຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສຳລັບສານບູຊາ.
ນີ້ເປັນເຄື່ອງບູຊາຂອງນາໂຊນລູກຊາຍຂອງອຳມີນາດາບ.
[18]ມື້ທີສອງ, ເນທານາເອນລູກຊາຍຂອງຊູອາ, ຜູ້ນຳຂອງເຜົ່າອິດຊາຄາ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.
[19]ເຂົາໄດ້ຖວາຍເປັນເຄື່ອງບູຊາຂອງເຂົາຄືຈານເງິນຫນຶ່ງໃບຫນັກ130ເຊເຂ ແລະຊາມເງິນຫນຶ່ງໃບຫນັກ ເຈັດສິບເຊເຂ
ຕາມອັດຕາຊັ່ງຂອງສຳນັກນະມັດສະການ ພາຊະນະທັງສອງໃບນີ້ເຕັມດ້ວຍແປ້ງຢ່າງດີປົນກັບນ້ຳມັນເພື່ອເປັນພືດຜົນບູຊາ.
[20]ເຂົາໄດ້ຖວາຍຈານຄຳຫນຶ່ງໃບຫນັກ 10 ເຊເຂ, ທີ່ເຕັມດ້ວຍເຄື່ອງຫອມ.[21]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ,
ແລະລູກແກະຜູ້ອາຍຸຫນຶ່ງປີຫນຶ່ງໂຕເປັນເຄື່ອງບູຊາ.[22]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[23]ເຂົາຖວາຍງົວຜູ້ສອງໂຕ,
ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ, ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສຳລັບສັນຕິບູຊາ.
ນີ້ເປັນເຄື່ອງບູຊາຂອງເນທານາເອນລູກຊາຍຂອງຊູອາ.
[24]ມື້ທີສາມ, ເອລີອາບລູກຊາຍຂອງເຮໂລນ, ຜູ້ນຳຂອງເຜົ່າເຊບູໂລນ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[25]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ 130 ເຊເຂ, ແລະຊາມເງິນຊາມເງິນຫນຶ່ງໃບຫນັກ70 ເຊເຂ ຕາມອັດຕາຊັ່ງຂອງສຳນັກນະມັດສະການ
ພາຊະນະທັງສອງໃບນີ້ເຕັມດ້ວຍແປ້ງຢ່າງດີປົນກັບນ້ຳມັນເພື່ອເປັນທັນຍະບູຊາ.[26]ເຂົາໄດ້ຖວາຍຈານທອງຄຳຫນຶ່ງໃບຫນັກສິບເຊເຂ,
ທີ່ເຕັມດ້ວຍເຄື່ອງຫອມ.
[27]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະໂຕຜູ້ອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[28]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລຶບລ້າງບາບ.[29]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະໂຕຜູ້ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສຳລັບສັນຕິບູຊາ ນີ້ເປັນເຄື່ອງບູຊາຂອງເອລີອາບລູກຊາຍຂອງເຮໂລນ.
[30]ມື້ທີສີ່, ເອລີຊູລູກຊາຍຂອງເຊເດອູເຣ, ຜູ້ນຳຂອງເຜົ່າຣູເບັນ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[31]ເຄື່ອງບູຊາຂອງເຂົາຄື ຈານເງິນຫນຶ່ງໃບຫນັກ
130 ເຊເຂ ແລະຊາມເງິນຫນຶ່ງໃບຫນັກເຈັດສິບເຊເຂ, ຕາມການຄິດໄລ່ຕາມອັດຕາຊັ່ງຂອງສຳນັກນະມັດສະການ
ພາຊະນະທັງສອງໃບນີ້ເຕັມໄປດ້ວຍແປ້ງຢ່າງດີປົນກັບນ້ຳມັນເພື່ອເປັນພືດຜົນບູຊາ.[32]ເຂົາໄດ້ຖວາຍຈານທອງຄຳຫນຶ່ງໃບຫນັກ ສິບ ເຊເຂ
ທີ່ເຕັມດ້ວຍເຄື່ອງຫອມ.
[33]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ຫນຶ່ງໂຕເປັນເຄື່ອງເຜົາບູຊາ.[34]ເຂົາຖວາຍແບ້ຜູ້
ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[35]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ, ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ,
ເປັນເຫມືອນສັນຕິບູຊາຖວາຍ, ເປັນເຄື່ອງບູຊາຂອງເອລີຊູລູກຊາຍຂອງເຊເດອູເລ.
[36]ມື້ທີຫ້າ, ເຊລູມີເອນລູກຊາຍຂອງຊູຣິດຊັດດາຍ, ຜູ້ນຳຂອງເຜົ່າຊີເມໂອນ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[37]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ 130ເຊເຂ ແລະຊາມເງິນຫນຶ່ງໃບຫນັກເຈັດສິບ ເຊເຂ, ຕາມອັດຕາຊັ່ງຂອງສຳນັກນະມັດມັດສະການ
ພາຊະນະທັງສອງໃບນີ້ເຕັມດ້ວຍແປ້ງຢ່າງດີປະສົມກັບນ້ຳມັນເພື່ອເປັນພືດຜົນບູຊາ.[38]ເຂົາໄດ້ຖວາຍຈານທອງຄຳຫນຶ່ງໃບຫນັກສິບເຊເຂ.
ທີ່ເຕັມດ້ວຍເຄື່ອງຫອມ.


generated on Tue Jun 17 19:01:42 2025

[39]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ມີອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[40]ເຂົາໄດ້ຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[41]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສໍາລັບສານບູຊາ. ນີ້ເປັນເຄື່ອງຂອງເຊລູມີເອນລູກຊາຍຂອງຊູຣິດຊັດດາຍ.
[42]ມື້ທີຫົກ, ເອລີອາສັບລູກຊາຍຂອງດູເອນ, ຜູ້ນໍາຂອງເຜົ່າກາດ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[43]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ130ເຊເຂ ແລະຊາມເງິນຫນຶ່ງໃບຫນັກເຈັດສິບເຊເຂ, ຕາມອັດຕາຊັ່ງຂອງສໍານັກນະມັດສະການ.
ພາຊະນະທັງສອງໃບເຕັມດ້ວຍແປ້ງຢ່າງດີປົນກັບນໍ້າມັນເພື່ອເປັນພືດຜົນບູຊາ.[44]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກສິບເຊເຂ,
ທີ່ເຕັມດ້ວຍເຄື່ອງຫອມ.
[45]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[46]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງຖວາຍບູຊາລົບລ້າງບາບ.[47]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະໂຕຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສໍາລັບສັນຕິບູຊາ. ນີ້ເປັນເຄື່ອງບູຊາຂອງເອລີອາສັບລູກຊາຍຂອງດູເອນ.
[48]ມື້ທີເຈັດ, ເອລີຊາມາລູກຊາຍຂອງອາມມີຮຸດ, ຜູ້ນໍາຂອງເຜົ່າເອຟຣາອິມ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.
[49]ເຄື່ອງບູຊາຂອງເຂົາຄືຈານເງິນຫນຶ່ງໃບຫນັກ 130 ເຊເຂ ແລະຊາມເງິນຫນຶ່ງໃບຫນັກເຈັດສິບເຊເຂ,
ຕາມອັດຕາຊັ່ງຂອງສໍານັກນະມັດສະການ. ພາຊະນະສອງໃບນີ້ເຕັມດ້ວຍແປ້ງຢ່າງດີປະສົມກັບນໍ້າມັນເພື່ອເປັນທັນຍະບູຊາ.
[50]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກສິບເຊເຂ, ທີ່ເຕັມດ້ວຍເຄື່ອງຫອມ.
[51]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[52]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[53]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕເປັນເຄື່ອງບູຊາສໍາລັບສັນຕິບູຊາ, ນີ້ເປັນເຄື່ອງບູຊາຂອງເອລີຊາມາລູກຊາຍຂອງອາມມີຮຸດ.
[54]ມື້ທີແປດ, ກາມາລີເອນລູກຊາຍຂອງເປດາຊູ, ຜູ້ນໍາຂອງເຜົ່າມານັດເຊ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[55]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ 130ເຊເຂ ແລະຊາມເງິນຫນຶ່ງໃບຫນັກ ເຈັດສິບເຊເຂ, ຕາມອັດຕາຊັ່ງຂອງສໍານັກນະມັດສະການ,
ພາຊະນະທັງສອງໃບເຕັມດ້ວຍແປ້ງຢ່າງດີປະສົມກັບນໍ້າມັນເພື່ອເປັນພືດຜົນບູຊາ.[56]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກ ສິບເຊເຂ,
ທີ່ເຕັມດ້ວຍເຄື່ອງຫອມ.
[57]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[58]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[59]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕເປັນເຄື່ອງບູຊາສໍາລັບສັນຕິບູຊາ, ນີ້ເປັນເຄື່ອງບູຊາຂອງກາມາລີເອນລູກຊາຍຂອງເປດາຊູ.
[60]ມື້ທີເກົ້າ, ອາບີດານລູກຊາຍຂອງກີເດໂອນີ, ຜູ້ນໍາຂອງເຜົ່າເບັນຢາມິນໄດ້ຖວາຍເຄື່ອງບູຊາຂອງເຂົາ.[61]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ130ເຊເຂ ແລະຊາມເງິນຫນຶ່ງໃບຫນັກ ເຈັດສິບເຊເຂ, ຕາມອັດຕາຊັ່ງຂອງສໍານັກນະມັດສະການ,
ພາຊະນະທັງສອງໃບເຕັມດ້ວຍແປ້ງຢ່າງດີປະສົມກັບນໍ້າມັນເພື່ອເປັນພືດຜົນບູຊາ.[62]ເຂົາຖວາຍຈານທອງຄໍາຫນຶ່ງໃບຫນັກສິບເຊເຂ,
ທີ່ເຕັມດ້ວຍເຄື່ອງຫອມ.
[63]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີເປັນເຄື່ອງເຜົາບູຊາ.
[64]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[65]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະໂຕຜູ້ອາຍຸຫນຶ່ງປີຫ້າໂຕເປັນເຄື່ອງບູຊາສໍາລັບສັນຕິບູຊາ, ນີ້ເປັນເຄື່ອງບູຊາຂອງອາບີດານລູກຊາຍຂອງກີເດໂອນີ.
[66]ໃນມື້ທີສິບ, ອາຮີເອເຊລູກຊາຍຂອງອໍາມີຊັດດາຍ, ຜູ້ນໍາຂອງເຜົ່າດານ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.
[67]ເຄື່ອງບູຊາຂອງເຂົາຄືຈານເງິນຫນຶ່ງໃບຫນັກ 130 ເຊເຂ, ແລະຊາມເງິນຫນຶ່ງໃບຫນັກເຈັດສິບ ເຊເຂ,
ຕາມອັດຕາຊັ່ງຂອງສໍານັກນະມັດສະການ. ພາຊະນະສອງໃບນີ້ເຕັມດວ້ຍແປ້ງຢ່າງດີປະສົມນໍ້າມັນເພື່ອເປັນທັນຍະບູຊາ.
[68]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກ ສິບເຊເຂ, ທີ່ເຕັມດ້ວຍເຄື່ອງຫອມ.
[69]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີຫນຶ່ງໂຕເປັນເຄື່ອງເຜົາບູຊາ.
[70]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[71]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະຜູ້ອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສໍາລັບສັນຕິບູຊາ. ນີ້ເປັນເຄື່ອງບູຊາຂອງອາຮີເອເຊລູກຊາຍຂອງອໍາມີຊັດດາຍ.
[72]ມື້ທີສິບເອັດ, ປາກີເອນລູກຊາຍຂອງອົກກະຣັນ, ຜູ້ນໍາຂອງເຜົ່າອາເຊ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.
[73]ເຄື່ອງບູຊາຂອງເຂົາຄືຈານເງິນຫນຶ່ງໃບຫນັກ 130 ເຊເຂແລະຊາມເງິນຫນຶ່ງໃບຫນັກ ເຈັດສິບເຊເຂ,
ຕາມອັດຕາຊັ່ງຂອງສໍານັກນະມັດສະການ. ພາຊະນະສອງໃບນີ້ເຕັມດ້ວຍແປ້ງເນື້ອລະອຽດປະສົມກັບນໍ້າມັນເພື່ອເປັນພືດຜົນບູຊາ.
[74]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກສິບເຊເຂທີ່ເຕັມດ້ວຍເຄື່ອງຫອມ.
[75]ເຂົາຖວາຍງົວຫນຸ່ມຫນຶ່ງໂຕ, ແກະຜູຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີຫນຶ່ງໂຕເປັນເຄື່ອງເຜົາບູຊາ.
[76]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.[77]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ,
ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສໍາລັບສັນຕິບູຊາ. ນີ້ເປັນເຄື່ອງບູຊາຂອງປາກີເອນລູກຊາຍຂອງອົກກະຣັນ.
[78]ມື້ທີສິບສອງ, ອາຮີຣາລູກຊາຍຂອງເອນັນ, ຜູ້ນໍາຂອງເຜົ່າເນັບທາລີ, ໄດ້ຖວາຍເຄື່ອງບູຊາຂອງເຂົາ.[79]ເຄື່ອງບູຊາຂອງເຂົາຄື
ຈານເງິນຫນຶ່ງໃບຫນັກ 130 ເຊເຂ ແລະຊາມເງິນຫນຶ່ງໃບຫນັກ ເຈັດສິບເຊເຂ, ຕາມອັດຕາຊັ່ງຂອງສໍານັກນະມັດສະການ
ພາຊະນະທັງສອງໃບນີ້ເຕັມດ້ວຍແປ້ງຢ່າງດີປະສົມນໍ້າມັນເພື່ອເປັນພືດຜົນບູຊາ.[80]ເຂົາໄດ້ຖວາຍຈານທອງຄໍາຫນຶ່ງໃບຫນັກ
ສິບເຊເຂທີ່ເຕັມດ້ວຍເຄື່ອງຫອມ.
[81]ແກະຜູ້ຫນຶ່ງໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີຫນຶ່ງໂຕເປັນເຄື່ອງເຜົາບູຊາ.[82]ເຂົາຖວາຍແບ້ຜູ້ຫນຶ່ງໂຕເປັນເຄື່ອງບູຊາລົບລ້າງບາບ.
[83]ເຂົາຖວາຍງົວຜູ້ສອງໂຕ, ແກະຜູ້ຫ້າໂຕ, ແບ້ຜູ້ຫ້າໂຕ, ແລະລູກແກະຜູ້ທີ່ມີອາຍຸຫນຶ່ງປີຫ້າໂຕ, ເປັນເຄື່ອງບູຊາສໍາລັບສັນບູຊາ.
ນີ້ເປັນເຄື່ອງບູຊາຂອງອາຮີຣາລູກຊາຍຂອງເອນັນ.

84ບັນດາຜູ້ນຳຂອງອິດສະຣາເອນ ໄດ້ແຍກສິ່ງທັງຫມົດເຫລົ່ານີ້ໄວ້ ໃນວັນທີໂມເຊ ເຈີມແທ່ນບູຊານັ້ນ. ພວກເຂົາແຍກຈານເງິນສິບສອງໃບ,
ຊາມເງິນສິບສອງໃບ, ແລະຈານທອງຄຳສິບສອງໃບ. 85ຈານເງິນແຕ່ລະໃບຫນັກ 130 ເຊເຂແລະຊາມເງິນແຕ່ລະໃບຫນັກ ເຈັດສິບເຊກຽນ,
ພາຊະນະເງິນທັງຫມົດມີນ້ຳຫນັກ 2,400 ເຊເຂ, ຕາມອັດຕາຊັ່ງຂອງສຳນັກນະມັດສະການ. 86ຈານທອງຄຳແຕ່ລະໃບ, ທີ່ເຕັມດ້ວຍເຄື່ອງຫອມ,
ຫນັກ ສິບເຊເຂ, ຕາມອັດຕາຊັ່ງຂອງສຳນັກນະມັດສະການ. ຈານທອງຄຳທັງຫມົດຫນັກ 120 ເຊເຂ.
87ພວກເຂົາແຍກສັດທັງຫມົດໄວ້ເປັນເຄື່ອງເຜົາບູຊາຄື, ງົວສິບສອງໂຕ, ແກະຜູ້ສິບສອງໂຕ, ແລະລູກແກະໂຕຜູ້ອາຍຸຫນຶ່ງປີສິບສອງໂຕ,
ພວກເຂົາໄດ້ຖວາຍພືດຜົນບູຊາຂອງພວກເຂົາ. ພວກເຂົາໄດ້ຖວາຍແບ້ຜູ້ສິບສອງໂຕເປັນເຄື່ອງບູຊາລຶບລ້າງບາບ.
88ພວກເຂົາໄດ້ຖວາຍຈາກຝູງສັດທັງຫມົດ, ຂອງພວກເຂົາຄື ງົວ 24 ໂຕ, ແກະຜູ້ 60 ໂຕ, ແບ້ຜູ້ 60 ໂຕ, ແລະລູກແກະຜູ້ອາຍຸຫນຶ່ງປີ 60 ໂຕ,
ເປັນເຄື່ອງບູຊາສຳລັບສັນຕິບູຊາ. ນີ້ເປັນການມອບຖວາຍ ແທ່ນບູຊາຫລັງຈາກທີ່ໄດ້ເຈີມແທ່ນບູຊານັ້ນແລ້ວ.
89ເມື່ອໂມເຊ ເຂົ້າໄປໃນເຕັນປະຊຸມເພື່ອ ກ່າວຕໍ່ພຣະຢາເວ, ເພິ່ນໄດ້ຍິນພຣະສຸລະສຽງຂອງພຣະອົງກ່າວກັບເພິ່ນ.
ພຣະຢາເວກ່າວກັບເພິ່ນຈາກເຫນືອຝາຫີບແຫ່ງການໄຖ່ເທິງຫີບແຫ່ງພັນທະສັນຍາ, ຈາກລະຫວ່າງເຄຣຸບທັງສອງ. ພຣະອົງໄດ້ກ່າວກັບເພິ່ນ.


generated on Tue Jun 17 19:01:42 2025

8 [1]ພຣະຢາເວໄດ້ບອກກັບໂມເຊ. ພຣະອົງບອກວ່າ,[2]"ຈົ່ງບອກເຂົາວ່າ,
'ຕະກຽງເຈັດຫນ່ວຍຕ້ອງສ່ອງແສງໄປທາງຫນ້າຂອງຫລັກຕະກຽງເມື່ອເຈົ້າໄຕ້ຕະກຽງເຫລົ່ານັ້ນ.'"

[3]ອາໂຣນກໍໄດ້ເຮັດດັ່ງນີ້. ເພິ່ນໄຕ້ຕະກຽງເທິງຫລັກຕະກຽງເພື່ອໃຫ້ສ່ອງແສງໄປທາງດ້ານຫນ້າຂອງຫລັກຕະກຽງນັ້ນ,
ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ.[4]ຫລັກຕະກຽງໄດ້ເຮັດຂຶ້ນໃນລັກສະນະນີ້ພຣະຢາເວໄດ້ຊົງສະແດງໃຫ້ໂມເຊເຫັນແບບສຳລັບຫລັກຕະກຽງ.
ຫລັກຕະກຽງນັ້ນເຮັດດ້ວຍທອງຄຳ ທີ່ໃຊ້ຄ້ອນທຸບຕັ້ງແຕ່ຕີນຈົນເຖິງຍອດທີ່ມີຖ້ວຍທີ່ທຸບດ້ວຍຄ້ອນເປັນເຫມືອນດອກໄມ້.
[5]ພຣະຢາເວໄດ້ບອກກັບໂມເຊ. ອີກຄັ້ງພຣະອົງບອກວ່າ,"[6]ຈົ່ງນຳຄົນເລວີອອກຈາກທ່າມກາງຄົນອິດສະຣາເອນແລະຊຳລະພວກເຂົາໃຫ້ບໍຣິສຸດ.
[7]ຄືໃຫ້ໃຊ້ນໍ້າຊຳລະຊິດໃສ່ພວກເຂົາ. ຈົ່ງໃຫ້ພວກເຂົາແຖຂົນທົ່ວທັງຕົວຂອງພວກເຂົາ, ແລະຊັກເສື້ອຜ້າຂອງພວກເຂົາ
ການເຮັດແບບນີ້ເປັນການຊຳລະຕົວພວກເຂົາເອງໃຫ້ບໍລິສຸດ.
[8]ແລ້ວໃຫ້ພວກເຂົານຳງົວຫນຸ່ມມາໂຕຫນຶ່ງແລະພືດຜົນບູຊາຄູ່ກັນທີ່ເປັນແປ້ງຢ່າງດີປະສົມກັບນໍ້າມັນ.
ໃຫ້ພວກເຂົາເອົາງົວຫນຸ່ມອີກໂຕຫນຶ່ງມາເປັນເຄື່ອງບູຊາລົບລ້າງບາບ.
[9]ມາທີ່ດ້ານຫນ້າເຕັນປະຊຸມ ແລະໃຫ້ເອີ້ນຊຸມຊົນຂອງຄົນອິດສະຣາເອນທັງຫມົດມາຊຸມນຸມກັນ.[10]ເມື່ອເຈົ້ານຳຄົນເລວີມາຢູ່ຕໍ່ຫນ້າພະຢາເວ,
ຄົນອິດສະຣາເອນຕ້ອງວາງມືພວກເຂົາເທິງຄົນເລວີ.[11]ອາໂຣນຕ້ອງຖວາຍຄົນເລວີຕໍ່ຫນ້າພຣະຢາເວ,
ເປັນເຄື່ອງບູຊາແກວ່ງໄປແກວ່ງມາຈາກຄົນອິດສະຣາເອນເພື່ອໃຫ້ພວກເຂົາເຮັດຫນ້າທີ່ຮັບໃຊ້ພຣະຢາເວ.
[12]ເຈົ້າຕ້ອງຖວາຍງົວໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບແລະງົວອີກໂຕຫນຶ່ງເປັນເຄື່ອງເຜົາບູຊາ, ເພື່ອລົບລ້າງບາບໃຫ້ກັບຄົນເລວີ.
[13]ຈົ່ງໃຫ້ຄົນເລວີຢູ່ຕໍ່ຫນ້າອາໂຣນແລະຕໍ່ຫນ້າບັນດາລູກຊາຍຂອງເຂົາ, ແລະຍົກພວກເຂົາຂຶ້ນເປັນເຄື່ອງບູຊາແກວ່ງໄປແກວ່ງມາຖວາຍຕໍ່ເຮົາ.
[14]ໃນການເຮັດແບບນີ້ ເຈົ້າຕ້ອງແຍກຄົນເລວີອອກຈາກທ່າມກາງຄົນອິດສະຣາເອນ. ຄົນເລວີຈະເປັນຂອງເຮົາ.[15]ຫລັງຈາກນັ້ນ,
ຄົນເລວີຕ້ອງເຂົ້າໄປປະຕິບັດຫນ້າທີ່ໃນເຕັນປະຊຸມ. ເຈົ້າຕ້ອງຊຳລະພວກເຂົາໃຫ້ບໍລິສຸດ.
ເຈົ້າຕ້ອງຖວາຍພວກເຂົາເປັນເຄື່ອງບູຊາຍົກຍໍມາຖວາຍ.
[16]ຈົ່ງເຮັດແບບນີ້, ເພາະພວກເຂົາເປັນຂອງເຮົາຢ່າງແທ້ຈິງ ຈາກທ່າມກາງຄົນອິດສະຣາເອນ.
ພວກເຂົາຈະມາແທນທີ່ເດັກຊາຍແຕ່ລະຄົນທີ່ເກີດຈາກທ້ອງເປັນຄົນທຳອິດ, ຄືລູກກົກຂອງເຊື້ອສາຍທັງຫມົດຂອງອິດສະຣາເອນ.
ເຮົາໄດ້ຮັບເອົາຄົນເລວີໄວ້ສຳລັບເຮົາເອງ.[17]ລູກກົກທັງຫມົດທ່າມກາງຄົນອິດສະຣາເອນເປັນຂອງເຮົາ, ທັງຄົນແລະສັດ.
ໃນວັນທີ່ເຮົາເອົາຊີວິດລູກຊາຍກົກທັງຫມົດໃນແຜ່ນດິນເອຢິບ, ເຮົາໄດ້ແຍກພວກເຂົາໄວ້ສຳລັບເຮົາເອງ.
[18]ເຮົາໄດ້ຮັບເອົາຄົນເລວີຈາກທ່າມກາງຄົນອິດສະຣາເອນມາແທນທີ່ລູກກົກທັງຫມົດ.
[19]ເຮົາໄດ້ມອບພວກຄົນເລວີເປັນຂອງປະທານໃຫ້ກັບອາໂຣນແລະບັນດາລູກຂອງເຂົາ. ເຮົາໄດ້ຮັບເອົາພວກເຂົາຈາກທ່າມກາງຄົນອິດສະຣາເອນ
ເພື່ອຈະເຮັດຫນ້າທີ່ຂອງຄົນອິດສະຣາເອນໃນຫໍເຕັນປະຊຸມ. ເຮົາໄດ້ມອບພວກເຂົາເພື່ອລົບລ້າງບາບໃຫ້ກັບຄົນອິດສະຣາເອນ
ເພື່ອທີ່ຈະບໍ່ມີໄພພິບັດໃດໆ ຈະທຳຮ້າຍຄົນເຫລົ່ານັ້ນເມື່ອພວກເຂົາມາຢູ່ໃກ້ສະຖານທີ່ສັກສິດ"
[20]ໂມເຊ, ອາໂຣນ, ແລະຊຸມຊົນຂອງຄົນອິດສະຣາເອນທັງຫມົດກໍໄດ້ເຮັດດັ່ງນີ້ກັບຄົນເລວີ. ພວກເຂົາໄດ້ເຮັດທຸກຢ່າງທີ່ພຣະຢາເວໄດ້ຊົງສັ່ງ
ໂມເຊ ກ່ຽວກັບຄົນເລວີ. ຄົນອິດສະຣາເອນ ກໍໄດ້ເຮັດດັ່ງນີ້ກັບພວກເຂົາ.[21]ຄົນເລວີກໍຊຳລະຕົນເອງໃຫ້ບໍລິສຸດ
ແລະພວກເຂົາຊັກເສື້ອຜ້າຂອງຕົນ, ແລະອາໂຣນໄດ້ຖວາຍພວກເຂົາເປັນເຄື່ອງບູຊາຍົກຍໍຖວາຍແດ່ພຣະຢາເວ
ແລະເພິ່ນກໍເຮັດການລົບລ້າງບາບໃຫ້ກັບພວກເຂົາເພື່ອຊຳລະພວກເຂົາໃຫ້ບໍລິສຸດ.
[22]ຫລັງຈາກນັ້ນ, ຄົນເລວີກໍໄດ້ເຂົ້າໄປທຳການບົວລະບັດຫນ້າທີ່ຂອງພວກເຂົາ
ໃນຫໍເຕັນປະຊຸມຕໍ່ຫນ້າອາໂຣນແລະຕໍ່ຫນ້າບັນດາລູກຊາຍຂອງອາໂຣນ. ນີ້ເປັນໄປຕາມທີ່ພຣະຢາເວໄດ້ຊົງສັ່ງກັບໂມເຊກ່ຽວກັບຄົນເລວີ.
ພວກເຂົາໄດ້ປະຕິບັດຕໍ່ຄົນເລວີທຸກຄົນດ້ວຍວິທີການນີ້.
[23]ພຣະຢາເວໄດ້ບອກກັບໂມເຊ. ອີກຄັ້ງພຣະອົງບອກວ່າ,[24]" ກົດທັງຫມົດນີ້ໃຊ້ສຳລັບຄົນເລວີ ທີ່ມີອາຍຸ ຊາວຫ້າປີ ຂຶ້ນໄປ.
ພວກເຂົາຕ້ອງເຂົ້າຮ່ວມໃນກຸ່ມເພື່ອປະຕິບັດຫນ້າທີ່ໃນເຕັນປະຊຸມ.
[25]ພວກເຂົາຕ້ອງຢຸດການປະຕິບັດຫນ້າທີ່ໃນລັກສະນະນີ້ເມື່ອມີອາຍຸ ຫ້າສິບປີ. ເຖິງທີ່ກຳນົດໄວ້ນັ້ນ ພວກເຂົາບໍ່ຕ້ອງປະຕິບັດຫນ້າທີ່ອີກຕໍ່ໄປ.
[26]ພວກເຂົາອາດຈະຍັງຊ່ວຍພວກພີ່ນ້ອງຂອງຕົນທີ່ຍັງເຮັດວຽກຢູ່ໃນເຕັນປະຊຸມກໍໄດ້, ແຕ່ພວກເຂົາບໍ່ຕ້ອງປະຕິບັດຫນ້າທີ່ອີກຕໍ່ໄປ.
ເຈົ້າຕ້ອງກຳກັບຮັກສາຄົນເລວີໃນເລື່ອງເຫລົ່ານີ້ທັງຫມົດ."

9 [1]ພຣະຢາເວໄດ້ບອກກັບໂມເຊ ໃນຖິ່ນແຫ້ງແລ້ງກັນດານຊີນາຍ,
ໃນເດືອນທີຫນຶ່ງຂອງປີທີສອງຫລັງຈາກທີ່ພວກເຂົາອອກມາຈາກແຜ່ນດິນເອຢິບ. ພຣະອົງກ່າວວ່າ,[2]"
ຈົ່ງໃຫ້ຄົນອິດສະລາເອນຖືປັດສະຄາຕາມເວລາທີ່ກຳນົດໄວ້ຂອງປີ.[3]ໃນວັນທີສິບສີ່ຂອງເດືອນນີ້, ເວລາແລງ,
ເຈົ້າຕ້ອງຖືປັດສະຄາຕາມເວລາກຳນົດໄວ້ຂອງປີ. ເຈົ້າຕ້ອງຖືປັດສະຄາ, ຕາມກົດລະບຽບທຸກຢ່າງ,
ແລະເຮັດຕາມຂໍ້ບັງຄັບທັງຫມົດທີ່ກ່ຽວຂ້ອງກັບເທດສະການນັ້ນ."

[4]ດັ່ງນັ້ນໂມເຊຈຶ່ງໄດ້ບອກກັບຄົນອິດສະຣາເອນວ່າພວກເຂົາຄວນຈະຖືເທດສະການປັດສະຄາ.[5]ດ້ວຍເຫດນີ້
ພວກເຂົາຈຶ່ງຖືປັດສະຄາໃນເດືອນທີຫນຶ່ງ, ວັນທີສິບສີ່ຂອງເດືອນນັ້ນ, ເວລາແລງ, ໃນຖິ່ນແຫ້ງແລ້ງກັນດານຊີນາຍ.
ຄົນອິດສະຣາເອນກໍໄດ້ເຮັດຕາມທຸກຢ່າງທີ່ພຣະຢາເວໄດ້ຊົງສັ່ງໃຫ້ໂມເຊເຮັດ.
[6]ມີບາງຄົນທີ່ເປັນມົນທິນເນື່ອງຈາກພວກເຂົາໄດ້ແຕະຕ້ອງສົບ. ພວກເຂົາບໍ່ສາມາດຖືປັດສະຄາໃນວັນນັ້ນໄດ້. ພວກເຂົາຈຶ່ງໄປຢູ່ຕໍ່ຫນ້າໂມເຊ
ແລະອາໂຣນ ໃນວັນດຽວກັນນັ້ນ.[7]ຄົນເຫລົ່ານັ້ນກ່າວກັບໂມເຊວ່າ, "ເຮົາໄດ້ເປັນມົນທິນເພາະໄດ້ແຕະຕ້ອງສົບ.
ເປັນຫຍັງທ່ານຈຶ່ງຫ້າມເຮົາຈາກການຖວາຍເຄື່ອງບູຊາແດ່ພຣະຢາເວ ຕາມເວລາທີ່ກຳນົດໄວ້ຂອງປີ
ທ່າມກາງຄົນອິດສະຣາເອນ?"[8]ໂມເຊຈຶ່ງຕອບຄົນເຫລົ່ານັ້ນວ່າ," ຈົ່ງລໍຖ້າ ຂ້າພະເຈົ້າເພື່ອທີ່ຈະຟັງວ່າ
ພຣະຢາເວຈະບອກສັ່ງແນວໃດກ່ຽວກັບພວກທ່ານ.
[9]ພຣະຢາເວໄດ້ບອກກັບໂມເຊ. ພຣະອົງບອກວ່າ,[10]ຈົ່ງເວົ້າກັບຄົນອິດສະຣາເອນ. ຈົ່ງບອກວ່າ,'
ຖ້າຄົນໃດໃນພວກເຈົ້າຫລືລູກຫລານຂອງພວກເຈົ້າເປັນມົນທິນເພາະແຕະຕ້ອງສົບ, ຫລືຢູ່ລະຫວ່າງການເດີນທາງ,
ເຂົາກໍຍັງຖືປັດສະຄາແດ່ພຣະຢາເວໄດ້.'
[11]ພວກເຂົາຕ້ອງຖືປັດສະຄາໃນເດືອນທີສອງ ວັນທີສິບສີ່ເວລາແລງ. ພວກເຂົາຕ້ອງກິນປັດສະຄາພ້ອມກັບເຂົ້າຈີ່ບໍ່ມີເຊື້ອແປ້ງກັບຜັກຂົມ.
[12]ຢ່າໃຫ້ພວກເຂົາປະປັດສະຄາເຫລືອໄວ້ຮອດມື້ອື່ນເຊົ້າ, ຫລືຫັກກະດູກໃດໆຂອງສັດ. ພວກເຂົາຕ້ອງເຮັດຕາມກົດລະບຽບຂອງປັດສະຄາ.
[13]ແຕ່ຄົນໃດທີ່ບໍ່ເປັນມົນທິນ ແລະ ບໍ່ໄດ້ຢູ່ລະຫວ່າງການເດີນທາງ, ແຕ່ຜູ້ນັ້ນບໍ່ໄດ້ຖືປັດສະຄາ,
ຄົນນັ້ນຕ້ອງຖືກຕັດຂາດຈາກຊຸມຊົນຂອງເຂົາເພາະເຂົາບໍ່ຖວາຍເຄື່ອງບູຊາທີ່ ພຣະຢາເວ ຊົງປະສົງຕາມເວລາທີ່ກຳນົດໄວ້ຂອງປີ.
ຄົນນັ້ນຕ້ອງແບກຮັບບາບຂອງເຂົາ.[14]ຖ້າຄົນຕ່າງດ້າວຄົນໃດທີ່ອາໃສຢູ່ທ່າມກາງພວກເຈົ້າ ແລະຖືປັດສະຄາເພື່ອຖວາຍກຽດແດ່ພຣະຢາເວ,
ເຂົາຕ້ອງຖືປັດສະຄາແລະເຮັດທຸກຢ່າງຕາມທີ່ພຣະອົງໄດ້ຊົງສັ່ງໄວ້, ໃນການຖືກົດເກນຕ່າງໆຂອງປັດສະຄາ, ແລະຕາມກົດຂອງປັດສະຄາ.
ເຈົ້າຕ້ອງມີກົດຢ່າງດຽວກັນສຳລັບຄົນຕ່າງດ້າວ ແລະ ສຳລັບທຸກຄົນທີ່ເກີດໃນແຜ່ນດິນນີ້."
[15]ໃນວັນທີຈັດຕັ້ງຫໍເຕັນສັກສິດ, ໄດ້ມີເມກມາປົກຄຸມຫໍເຕັນສັກສິດ, ທີ່ເປັນຫໍເຕັນແຫ່ງພັນທະສັນຍາພຣະບັນຊາ.
ໃນຕອນກາງຄືນເມກທີ່ຢູ່ເຫນືອຫໍເຕັນສັກສິດ. ກໍຈະປາກົດເຫມືອນໄຟຈົນເຖິງຕອນເຊົ້າ.[16]ກໍຈະເປັນເຊັ່ນນັ້ນຢູ່ສະເຫມີ.
ເມກຈະປົກຄຸມຫໍເຕັນສັກສິດແລະປາກົດເຫມືອນໄຟໃນຕອນກາງຄືນ.[17]ເມື່ອໃດກໍຕາມທີ່ເມກລອຍຂຶ້ນໄປຈາກເຕັນນັ້ນ, ຄົນອິດສະຣາເອນ
ກໍຈະອອກເດີນທາງໄປ. ເມກຢຸດລົງທີ່ໃດກໍຕາມ, ຄົນອິດສະຣາເອນກໍຈະຕັ້ງຄ້າຍພັກທີ່ນັ້ນ.
[18]ຄົນອິດສະຣາເອນຈະອອກເດີນທາງຕາມຄຳສັ່ງຂອງພຣະຢາເວ, ແລະ ພວກເຂົາຈະຕັ້ງຄ້າຍພັກຕາມຄຳສັ່ງຂອງພຣະອົງ,
ໃນຂະນະທີ່ເມກຍັງຄົງຢຸດຢູ່ເຫນືອຫໍເຕັນສັກສິດ, ພວກເຂົາຈະພັກໃນຄ້າຍພັກຂອງພວກເຂົາ.
[19]ເມື່ອເມກຍັງຄົງຢູ່ເຫນືອຫໍເຕັນສັກສິດເປັນເວລາຫລາຍວັນ, ແລ້ວຄົນອິດສະຣາເອນກໍຈະເຮັດຕາມຄຳສັ່ງຂອງພຣະຢາເວ ແລະ
ບໍ່ອອກເດີນທາງ.
[20]ບາງເທື່ອເມກຍັງຢູ່ເຫນືອຫໍເຕັນສັກສິດບໍ່ພໍເທົ່າໃດວັນ. ໃນກໍລະນີນັ້ນ, ພວກເຂົາຕ້ອງເຮັດຕາມຄຳສັ່ງຂອງພຣະຢາເວ ພວກເຂົາຈະຕັ້ງຄ້າຍພັກ
ແລະອອກເດີນທາງອີກຄັ້ງຕາມຄຳສັ່ງຂອງພຣະອົງ.[21]ບາງເທື່ອເມກກໍປາກົດໃນຄ້າຍພັກ ຕັ້ງແຕ່ຕອນແລງຈົນເຖິງຕອນເຊົ້າ.
ເມື່ອເມກລອຍຂຶ້ນໄປໃນຕອນເຊົ້າ, ພວກເຂົາກໍອອກເດີນທາງ. ຖ້າເມກຄົງຢູ່ເປັນເວລາຫນຶ່ງວັນຫນຶ່ງຄືນ, ແຕ່ເມື່ອເມກລອຍຂຶ້ນໄປ
ພວກເຂົາກໍຈະເດີນທາງໄປ.
[22]ບໍ່ວ່າເມກຈະຢູ່ເຫນືອຫໍເຕັນສັກສິດ ເປັນເວລາສອງວັນ, ຫນຶ່ງເດືອນ, ຫລືຫນຶ່ງປີ, ຕາບໃດທີ່ເມກຍັງຢູ່ທີ່ນັ້ນ,
ຄົນອິດສະຣາເອນຕ້ອງພັກຢູ່ໃນຄ້າຍຂອງພວກເຂົາແລະບໍ່ອອກເດີນທາງ. ແຕ່ເມື່ອໃດກໍຕາມທີ່ເມກລອຍຂຶ້ນໄປ, ພວກເຂົາກໍຈະອອກເດີນທາງ.
[23]ພວກເຂົາຈະຕັ້ງຄ້າຍພັກຕາມຄຳສັ່ງຂອງພຣະຢາເວ, ແລະພວກເຂົາຈະເດີນທາງຕາມຄຳສັ່ງຂອງພຣະອົງ.
ພວກເຂົາຈະເຮັດຕາມຄຳສັ່ງຂອງພຣະຢາເວ ທີ່ຊົງປະທານຜ່ານທາງໂມເຊ.

10 [1]ພຣະຢາເວໄດ້ບອກກັບໂມເຊ. ພຣະອົງບອກວ່າ,[2]" ຈົ່ງເຮັດແກເງິນສອງອັນ. ຈົ່ງທຸບເງິນດ້ວຍຄ້ອນເພື່ອເຮັດແກເຫລົ່ານັ້ນ.
ເຈົ້າຕ້ອງໃຊ້ແກເພື່ອທີ່ຈະເອີ້ນຊຸມຊົນໃຫ້ມາຊຸມນຸມກັນ ແລະເອີ້ນຊຸມຊົນໃຫ້ເຄື່ອນຍ້າຍຄ້າຍພັກຂອງພວກເຂົາ.

[3]ພວກປະໂຣຫິດຕ້ອງເປົ່າແກເພື່ອເອີ້ນຊຸມຊົນທັງຫມົດມາຊຸມນຸມຢູ່ຂ້າງຫນ້າເຈົ້າທີ່ທາງເຂົ້າເຕັນປະຊຸມ.
[4]ຖ້າພວກປະໂຣຫິດເປົ່າແກພຽງອັນດຽວ, ແລ້ວບັນດາຜູ້ນໍາ, ທີ່ເປັນຫົວຫນ້າຂອງຕະກຸນຕ່າງໆຂອງອິດສະຣາເອນ, ຕ້ອງມາຊຸມນຸມກັນ.
[5]ເມື່ອເຈົ້າເປົ່າແກເປັນສັນຍານສຽງດັງ, ບັນດາຄ້າຍພັກທາງດ້ານທິດຕາເວັນອອກຕ້ອງເລີ່ມອອກເດີນທາງ.
[6]ເມື່ອເຈົ້າເປົ່າແກເປັນສັນຍານສຽງດັງຄັ້ງທີສອງ, ບັນດາຄ້າຍພັກທາງດ້ານທິດໃຕ້ກໍຕ້ອງເລີ່ມອອກເດີນທາງ.
ພວກເຂົາຕ້ອງເປົ່າເປັນສັນຍານສຽງດັງສໍາລັບການເດີນທາງຂອງພວກເຂົາ.[7]ເມື່ອຊຸມຊົນມາປະຊຸມກັນຈົ່ງເປົ່າແກເຫລົ່ານັ້ນ, ແຕ່ບໍ່ຕ້ອງສຽງດັງ.
[8]ພວກລູກຊາຍຂອງອາໂຣນ, ບັນດາປະໂຣຫິດ, ຕ້ອງເປົ່າແກ ແກນີ້ຈະເປັນກົດລະບຽບສໍາລັບພວກເຈົ້າ ຕະຫລອດຊົ່ວເຊັ່ນຄົນຂອງພວກເຈົ້າ.
[9]ເມື່ອພວກເຈົ້າອອກໄປເຮັດເສິກກັບສັດຕູທີ່ຂົ່ມເຫັງເຈົ້າ, ໃນແຜ່ນດິນຂອງເຈົ້າແລ້ວເຈົ້າຕ້ອງເປົ່າເປັນສຽງສັນຍານສູ້ຮົບດ້ວຍແກເຫລົ່ານັ້ນ.
ເຮົາ, ຢາເວພຣະເຈົ້າຂອງເຈົ້າ, ແລະຈະຊ່ວຍພວກເຈົ້າໃຫ້ພົ້ນຈາກສັດຕູຂອງພວກເຈົ້າ.
[10]ໃນເວລາແຫ່ງການສະເຫລີມສະຫລອງ, ທັງເທດສະການງານລ້ຽງທີ່ຈັດຂຶ້ນເປັນປະຈໍາແລະທຸກຕົ້ນເດືອນ,
ເຈົ້າຕ້ອງເປົ່າແກເຊັ່ນດຽວກັນເພື່ອໃຫ້ກຽດແກ່ເຄື່ອງເຜົາບູຊາຂອງເຈົ້າ ແລະເປົ່າແກເຫນືອເຄື່ອງບູຊາສໍາລັບສານບູຊາຂອງເຈົ້າ.
ສິ່ງເຫລົ່ານີ້ຈະເປັນການເຮັດໃຫ້ພວກເຈົ້າລະນຶກເຖິງ ເຮົາ, ພຣະເຈົ້າຂອງພວກເຈົ້າ. ເຮົາຄືຢາເວພຣະເຈົ້າຂອງເຈົ້າ."
[11]ໃນວັນທີຊາວຂອງເດືອນທີສອງປີທີສອງ, ເມກລອຍຂຶ້ນໄປຈາກຫໍເຕັນສັກສິດ, ແຫ່ງພັນທະສັນຍາພຣະບັນຊາ.
[12]ແລ້ວຄົນອິດສະຣາເອນກໍອອກເດີນທາງຈາກຖິ່ນທຸລະກັນດານຊີນາຍ. ເມກນັ້ນກໍຢຸດໃນຖິ່ນທຸລະກັນດານປາລານ.[13]ພວກເຂົາໄດ້ອອກເດີນທາງ,
ຄັ້ງທໍາອິດຕາມຄໍາສັ່ງຂອງພຣະຢາເວທີ່ໄດ້ຊົງປະທານຜ່ານທາງໂມເຊ.
[14]ຄ້າຍພັກພາຍໃຕ້ທຸງຂອງເຜົ່າຢູດາ ອອກເດີນທາງເປັນກອງທໍາອິດທີ່ເຄື່ອນຂະບວນ, ແຕ່ລະກອງຂອງພວກເຂົາອອກໄປ.
ນາໂຊນລູກຊາຍຂອງອັມມີນາດາບໄດ້ນໍາກອງຂອງຢູດາ.[15]ເນທານາເອນລູກຊາຍຂອງຊູອາໄດ້ນໍາກອງເຜົ່າຂອງຕະກຸນອິດຊາຄາ.[16]ເອລີອາບ
ລູກຊາຍຂອງເຮໂລນ ໄດ້ນໍາກອງເຜົ່າ ຂອງຕະກຸນເຊບູໂລນ.
[17]ຕະກຸນເກໂຊນແລະຕະກຸນເມຣາຣີ, ຜູ້ທີ່ດູແລຫໍເຕັນສັກສິດ, ກໍມ້າງຫໍເຕັນລົງ ແລະພວກເຂົາກໍໄດ້ອອກເດີນທາງ.[18]ຕໍ່ມາ,
ບັນດາກອງທີ່ຢູ່ພາຍໃຕ້ທຸງຄ້າຍພັກລູເບັນ ກໍເລີ່ມອອກເດີນທາງ. ເອລີຊູ ລູກຊາຍຂອງເຊເດອູເຣໄດ້ນໍາກອງຂອງຣູເບັນ.[19]ເຊລູມີເອນ
ລູກຊາຍຂອງຊູຣິດຊັດດາຍ ໄດ້ນໍາກອງເຜົ່າຂອງຕະກຸນ ຊີເມໂອນ.[20]ເອລີອາສັບລູກຊາຍຂອງ ດູເອນໄດ້ນໍາກອງເຜົ່າຂອງຕະກຸນກາດ.
[21]ຄົນໂກຮາດອອກເດີນທາງ. ພວກເຂົາແບກຫາມເຄື່ອງໃຊ້ບໍຣິສຸດຂອງສະຖານນະມັດສະການ.
ສ່ວນກອງອື່ນໆກໍຈະຈັດຕັ້ງຫໍເຕັນກ່ອນທີ່ຄົນໂກຮາດ ຈະໄປເຖິງທີ່ຄ້າຍພັກຕໍ່ໄປ.[22]ບັນດາກອງທີ່ຢູ່ພາຍໃຕ້ທຸງຂອງຕະກຸນເອຟຣາອິມ
ອອກເດີນທາງເປັນລໍາດັບຕໍ່ໄປ. ເອລີຊາມາລູກຊາຍຂອງອໍາມີຮຸດ ໄດ້ນໍາກອງຂອງເອຟຣາອິມ.
[23]ກາມາລີເອນລູກຊາຍຂອງເປດາຊູໄດ້ນໍາກອງເຜົ່າຂອງຕະກຸນມານາເຊ.
[24]ອາບີດານລູກຊາຍຂອງກີເດໂອນີໄດ້ນໍາກອງເຜົ່າຂອງຕະກຸນເບັນຢາມິນ.
[25]ບັນດາກອງທີ່ຕັ້ງຄ້າຍພັກພາຍໃຕ້ທຸງຂອງຕະກຸນ ດານ ອອກເດີນທາງເປັນກອງສຸດທ້າຍ. ອາຮີເອເຊລູກຊາຍຂອງອໍາມີຊັດດາຍໄດ້ນໍາກອງຂອງ
ດານ.[26]ປາກີເອນລູກຊາຍຂອງອົກກະຣັນ ໄດ້ນໍາກອງເຜົ່າຂອງຕະກຸນອາເຊ.[27]ອາຮີຣາລູກຊາຍຂອງເອນັນໄດ້ນໍາກອງເຜົ່າຂອງຕະກຸນນັບທາລີ.
[28]ນີ້ເປັນຮູບແບບການເດີນທາງ ຂອງກອງຕ່າງໆ ຂອງຊາວອິດສະຣາເອນ.
[29]ໂມເຊໄດ້ເວົ້າກັບໂຮບັບ ລູກຊາຍຂອງເຣອູເອນ ຄົນມີດີອານ. ເຣອູເອນເປັນພໍ່ຂອງເມຍຂອງໂມເຊ.
ໂມເຊໄດ້ເວົ້າກັບໂຮບັບວ່າ,"ເຮົາກໍາລັງເດີນທາງໄປຍັງສະຖານທີ່ ທີ່ພຣະຢາເວໄດ້ບອກ ວ່າ,' ເຮົາຈະມອບແຜ່ນດິນນັ້ນໃຫ້ກັບພວກເຈົ້າ.'
ມາກັບເຮົາເຖີດ ແລະ ເຮົາຈະເຮັດດີຕໍ່ເຈົ້າ. ພຣະຢາເວ ໄດ້ຊົງສັນຍາວ່າຈະຊົງເຮັດດີຕໍ່ອິດສະຣາເອນ,"[30]ແຕ່ໂຮບັບໄດ້ບອກໂມເຊວ່າ,"
ຂ້າພະເຈົ້າຈະບໍ່ໄປກັບທ່ານ. ຂ້າພະເຈົ້າຈະໄປຍັງແຜ່ນດິນຂອງຂ້າພະເຈົ້າ ແລະຊຸມຊົນຂອງຂ້າພະເຈົ້າ."
[31]ແລ້ວໂມເຊຈຶ່ງໄດ້ຕອບວ່າ," ຢ່າຈາກເຮົາໄປເລີຍ. ເຈົ້າຮູ້ວິທີການຕັ້ງຄ້າຍພັກໃນຖິ່ນທຸລະກັນດານ. ເຈົ້າຕ້ອງຄອຍລະວັງໃຫ້ກັບເຮົາ.
[32]ຖ້າເຈົ້າໄປກັບເຮົາ, ເຮົາຈະເຮັດດີຕໍ່ເຈົ້າ ເຊັ່ນດຽວກັບທີ່ພຣະຢາເວ ຊົງເຮັດດີຕໍ່ເຮົາ."
[33]ພວກເຂົາໄດ້ເດີນທາງຈາກພູເຂົາແຫ່ງ ພຣະຢາເວ ເປັນເວລາສາມວັນ. ຫີບແຫ່ງພັນທະສັນຍາຂອງພຣະຢາເວ
ກໍໄປຂ້າງຫນ້າພວກເຂົາເປັນເວລາສາມວັນ ເພື່ອຈະຫາສະຖານທີ່ພັກໃຫ້ກັບພວກເຂົາ.[34]ເມກຂອງພຣະຢາເວ
ຢູ່ເຫນືອພວກເຂົາໃນຕອນກາງເວັນໃນຂະນະທີ່ພວກເຂົາເດີນທາງ.
[35]ເມື່ອໃດກໍຕາມທີ່ຫີບນັ້ນອອກເດີນທາງ, ໂມເຊຈະກ່າວວ່າ,"ຂໍພຣະຢາເວ. ຊົງລຸກຂຶ້ນ, ຂໍຊົງເຮັດໃຫ້ສັດຕູຂອງພຣະອົງ. ກະຈັດກະຈາຍໄປ
ຂໍໃຫ້ຄົນເຫລົ່ານັ້ນທີ່ກຽດຊັງພຣະອົງແລ່ນຫນີໄປຈາກພຣະອົງ."[36]ເມື່ອໃດກໍຕາມທີ່ຫີບນັ້ນຢຸດລົງ, ໂມເຊກໍຈະກ່າວວ່າ," ຂໍພຣະຢາເວ,
ຊົງກັບມາ, ສູ່ຄົນອິດສະຣາເອນທີ່ມີຈໍານວນມາກມາຍຫລາຍຫມື່ນຄົນນີ້ດ້ວຍເຖີດ."

 generated on Tue Jun 17 19:01:42 2025

# 11

1ຕອນນີ້ປະຊາຊົນໄດ້ຈົ່ມກ່ຽວກັບຄວາມຍາກລຳບາກຂອງພວກເຂົາຂະນະທີ່ພຣະຢາເວຊົງຟັງຢູ່.
ພຣະຢາເວຊົງໄດ້ຍິນຄົນເຫລົ່ານັ້ນແລ້ວກໍໂມໂຫ. ໄຟຈາກພຣະຢາເວ ໄດ້ເຜົາໄຫມ້ຢູ່ທ່າມກາງພວກເຂົາ ແລະ
ເຜົາຄ້າຍພັກທີ່ຢູ່ຂ້າງນອກໄປບາງສ່ວນ. 2ແລ້ວປະຊາຊົນກໍຮ້ອງຂໍຕໍ່ໂມເຊ, ດັ່ງນັ້ນໂມເຊຈຶ່ງໄດ້ອະທິຖານຕໍ່ພຣະຢາເວ, ແລະ ໄຟນັ້ນກໍມອດ.
3ພວກເຂົາຈຶ່ງເອີ້ນສະຖານທີ່ນັ້ນວ່າຕາເບຣາ, ເພາະໄຟຂອງພຣະຢາເວໄດ້ເຜົາໄຫມ້ຢູ່ທ່າມກາງພວກເຂົາ.

4ພວກຄົນຕ່າງຊາດບາງຄົນກໍເຂົ້າມາຕັ້ງຄ້າຍພັກຢູ່ກັບຕະກຸນອິດສະຣາເອນ. ພວກເຂົາຕ້ອງການອາຫານທີ່ດີກວ່າມາກິນ.
ແລ້ວຄົນອິດສະຣາເອນ ກໍເລີ່ມຮ້ອງໄຫ້ ຄໍ່າຄວນແລະກ່າວວ່າ," ໃຜຈະເອົາຊີ້ນໃຫ້ພວກເຮົາກິນ? 5ພວກເຮົາຄິດເຖິງປາຢູ່ໃນເອຢິບ,
ທີ່ພວກເຮົາໄດ້ກິນໂດຍບໍ່ຕ້ອງເສຍອັນໃດ, ອີກທັງຫມາກແຕງ, ຫມາກໂມ, ຕົ້ນກະທຽມຈີນ, ຫົວຫອມ, ແລະຫົວກະທຽມ. 6ບັດນີ້
ເຮົາເບື່ອອາຫານນີ້ເຕັມທີ່ແລ້ວ, ເພາະທີ່ເຮົາເຫັນທັງຫມົດກໍມີແຕ່ມານາ."
7ມານາມີລັກສະນະເຫມືອນເມັດຜັກຊີ. ເບິ່ງເຫມືອນຢາງໄມ້. 8ປະຊາຊົນກໍຍ່າງອອກໄປຮອບໆ ແລະເກັບມານາ. ພວກເຂົາບົດມານາໃນໂມ້ຫີນ,
ຕຳໃນຄົກ, ຕົ້ມໃນຫມໍ້, ແລະເຮັດເປັນເຂົ້າຈີ່. ມານາມີລົດເຫມືອນນໍ້າມັນຫມາກກອກສົດ.
9ເມື່ອນໍ້າຫມອກຕົກລົງມາເຫນືອຄ້າຍພັກ, ມານາກໍຈະຕົກລົງມາດ້ວຍ. 10ໂມເຊໄດ້ຍິນວ່າປະຊາຊົນຮ້ອງໄຫ້ ຄໍ່າຄວນໃນຄອບຄົວຂອງພວກເຂົາ,
ແລະຜູ້ຊາຍທຸກຄົນກໍຢູ່ທີ່ທາງເຂົ້າຫໍເຕັນຂອງຕົນ. ພຣະຢາເວໂມໂຫຫລາຍ, ແລະການຈົ່ມຂອງພວກເຂົາເປັນຄວາມຜິດໃນສາຍຕາຂອງໂມເຊ.
11ໂມເຊຈຶ່ງໄດ້ກ່າວຕໍ່ພຣະຢາເວວ່າ," ເປັນຫຍັງພຣະອົງຈຶ່ງເຮັດໃຫ້ຜູ້ຮັບໃຊ້ຂອງພຣະອົງລຳບາກເຊັ່ນນີ້?
ເປັນຫຍັງພະອົງຈຶ່ງບໍ່ຊົງພໍພະໄທຂ້ານ້ອຍ? ພຣະອົງຊົງເຮັດໃຫ້ຂ້ານ້ອຍແບກພາລະຫນັກຈົນເກີນກຳລັງກັບຄົນທັງຫມົດນີ້.
12ຂ້ານອ້ຍຕັ້ງທ້ອງຄົນເຫລົ່ານີ້ມາບໍ? ຂ້ານ້ອຍເກີດພວກເຂົາມາ ເພື່ອທີ່ພຣະອົງຈະກ່າວກັບຂ້ານ້ອຍວ່າ, ' ຈົ່ງອຸ້ມເຂົາໄວ້ແນບເອິກຂອງເຈົ້າ
ເຫມືອນກັບພໍ່ອຸ້ມລູກນ້ອຍບໍ? ຂ້ານ້ອຍຄວນຈະອຸ້ມພວກເຂົາໄປຍັງແຜ່ນດິນ ທີ່ພຣະອົງຊົງສາບານກັບບັນດາ ບັນພະບູລຸດຂອງພວກເຂົາບໍ?
13ຂ້ານ້ອຍຈະຫາຊີ້ນຈາກໃສມາໃຫ້ຄົນທັງຫມົດນີ້ໄດ້? ພວກເຂົາກຳລັງຮ້ອງໄຫ້ຄໍ່າຄວານ ຢູ່ຕໍ່ຫນ້າຂ້ານ້ອຍແລະບອກວ່າ,
'ຂໍຊີ້ນໃຫ້ພວກເຮົາກິນ.' 14ຂ້ານ້ອຍພຽງຄົນດຽວ ບໍ່ສາມາດແບກຮັບຄົນເຫລົ່ານີ້ທັງຫມົດໄດ້. ພວກເຂົາມີຈຳນວນຫລາຍເກີນໄປສຳລັບຂ້ານ້ອຍ.
15ຖ້າຫາກພຣະອົງຈະຊົງກະທຳແກ່ຂ້ານ້ອຍເຊັ່ນນີ້, ກໍຂໍໃຫ້ພຣະອົງ, ຂ້າຂ້ານ້ອຍເສຍດຽວນີ້ເຖີດ, ແລະຖ້າພຣະອົງເມດຕາຂ້ານ້ອຍ
ກໍຂໍຊົງເອົາຄວາມທຸກຍາກຂອງຂ້ານ້ອຍອອກໄປເຖີດ."
16ພຣະຢາເວໄດ້ກ່າວກັບໂມເຊວ່າ." ຈົ່ງພາພວກຜູ້ໃຫຍ່ຂອງ ອິດສະຣາເອນ ເຈັດສິບຄົນມາຫາເຮົາ.
ຂໍໃຫ້ແນ່ໃຈວ່າພວກເຂົາເປັນພວກຜູ້ໃຫຍ່ແລະເປັນພວກເຈົ້າຫນ້າທີ່ຂອງປະຊາຊົນ. ຈົ່ງພາພວກເຂົາມາທີ່ຫໍເຕັນປະຊຸມແລະຢືນຢູ່ກັບເຈົ້າທີ່ນັ້ນ.
17ເຮົາຈະລົງມາແລະສົນທະນາກັບເຈົ້າທີ່ນັ້ນ. ເຮົາຈະເອົາພຣະວິນຍານທີ່ຢູ່ເທິງເຈົ້າບາງສ່ວນມາ ແລະໃສ່ລົງໄປເທິງພວກເຂົາ.
ພວກເຂົາຈະແບກພາລະປະຊາຊົນຮ່ວມກັບເຈົ້າ. ເຈົ້າບໍ່ຕ້ອງແບກພາລະພຽງຄົນດຽວ.
18ຈົ່ງບອກປະຊາຊົນວ່າ,' ຈົ່ງຊຳລະຕົວໃຫ້ບໍຣິສຸດ, ສຳລັບມື້ອື່ນແລະພວກເຈົ້າຈະໄດ້ກິນຊີ້ນແທ້ໆ, ເພາະພວກເຈົ້າໄດ້ຮ້ອງໄຫ້ຄໍ່າຄວນ
ແລະພຣະຢາເວຊົງໄດ້ຍິນທີ່ພວກເຈົ້າເວົ້າວ່າ," ໃຜຈະໃຫ້ຊີ້ນເຮົາກິນ? ເຮົາຢູ່ໃນເອຢິບກໍດີຢູ່ແລ້ວ."
ເພາະສະນັ້ນພຣະຢາເວຈະຊົງປະທານຊີ້ນໃຫ້ແກ່ພວກເຈົ້າ, ແລະພວກເຈົ້າຈະໄດ້ກິນຊີ້ນ. 19ພວກເຈົ້າຈະບໍ່ໄດ້ກິນຊີ້ນແຕ່ພຽງມື້ດຽວ, ສອງມື້,
ຫ້າມື້, ສິບມື້, ຫລືຊາວມື້, 20ແຕ່ພວກເຈົ້າຈະກິນຊີ້ນຕະຫລອດທັງເດືອນ ຈົນຊີ້ນອອກມາທາງຮູດັງຂອງເຈົ້າ.
ຈົນຊີ້ນເຮັດໃຫ້ພວກເຈົ້າເບື່ອຫນ່າຍມັນ ເພາະພວກເຈົ້າປະຕິເສດພຣະຢາເວ, ຜູ້ຊົງຢູ່ທ່າມກາງພວກເຈົ້າ.
ເຈົ້າໄດ້ຮ້ອງໄຫ້ຄໍ່າຄວນຕໍ່ຫນ້າພຣະອົງ. ເຈົ້າບອກວ່າ," ເປັນຫຍັງເຮົາຈຶ່ງອອກມາຈາກເອຢິບ?"'"
21ແລ້ວໂມເຊກ່າວວ່າ," ຂ້ານ້ອຍຢູ່ກັບຄົນ 600,000 ຄົນ ແລະພຣະອົງໄດ້ກ່າວວ່າ,'
ເຮົາຈະໃຫ້ຊີ້ນພວກເຂົາກິນຕະຫລອດທັງເດືອນ.' 22ເຮົາຄວນຈະຂ້າຝູງແບ້ ແກະແລະຝູງງົວມາເພື່ອໃຫ້ພວກເຂົາພໍໃຈບໍ?
ເຮົາຄວນຈະຈັບປາທັງຫມົດໃນທະເລມາເພື່ອເຮັດໃຫ້ພວກເຂົາພໍໃຈບໍ?" 23ພຣະຢາເວກ່າວກັບໂມເຊວ່າ," ມືຂອງເຮົາສັ້ນໄປບໍ?
ບັດນີ້ເຈົ້າຈະໄດ້ເຫັນວ່າຖ້ອຍຄຳຂອງເຮົາຈະເປັນຈິງຫລືບໍ່."
24ໂມເຊອອກໄປແລະບອກຖ້ອຍຄຳທີ່ພຣະຢາເວກ່າວຕໍ່ປະຊາຊົນ. ເພິ່ນໄດ້ປະຊຸມຜູ້ໃຫຍ່ຂອງປະຊາຊົນ ເຈັດສິບຄົນ
ແລະໃຫ້ພວກເຂົາຢືນຢູ່ຮອບຫໍເຕັນນັ້ນ. 25ພຣະຢາເວຊົງລົງມາໃນເມກ ແລະກ່າວກັບໂມເຊ.
ພຣະຢາເວໄດ້ຊົງນຳພຣະວິນຍານເທິງໂມເຊບາງສ່ວນໄປແລະໃສ່ເທິງພວກຜູ້ໃຫຍ່ທັງເຈັດສິບຄົນນັ້ນ.
ເມື່ອພຣະວິນຍານຊົງສະຖິດເທິງພວກເຂົາ, ພວກເຂົາກໍທຳນວາຍ, ແຕ່ສະເພາະໃນຊ່ວງເວລານັ້ນ ແລະບໍ່ໄດ້ເຮັດອີກເລີຍ.
26ຊາຍສອງຄົນທີ່ຍັງຢູ່ໃນຄ້າຍພັກ, ຊື່ເອັນດາດ ແລະ ເມດາດ. ພຣະວິນຍານໄດ້ຊົງສະຖິດເທິງພວກເຂົາເຊັ່ນກັນ.
ຊື່ຂອງພວກເຂົາຢູ່ໃນລາຍຊື່ນັ້ນດ້ວຍ, ແຕ່ພວກເຂົາບໍ່ໄດ້ອອກໄປທີ່ເຕັນນັ້ນ. ຢ່າງໃດກໍດີ, ພວກເຂົາກໍທຳນວາຍໃນຄ້າຍພັກ.
27ຊາຍຫນຸ່ມຄົນຫນຶ່ງທີ່ຢູ່ໃນຄ້າຍພັກນັ້ນໄດ້ແລ່ນມາບອກໂມເຊວ່າ," ເອັນດາດ ແລະເມດາດ ກຳລັງທຳນວາຍຢູ່ໃນຄ້າຍພັກ."
28ໂຢຊວຍລູກຊາຍຂອງນູນ, ຜູ້ຊ່ວຍຂອງໂມເຊ, ຊຶ່ງເປັນຄົນຫນຶ່ງຂອງຄົນທີ່ເພິ່ນເລືອກມາ, ບອກກັບໂມເຊວ່າ," ເຈົ້ານາຍຂອງຂ້ານ້ອຍ,
ຂໍໃຫ້ພວກເຂົາຢຸດເວົ້າເຖີດ." 29ໂມເຊບອກກັບເຂົາວ່າ, "ເຈົ້າອິດສາເພາະເຫັນແກ່ເຮົາບໍ? ເຮົາຢາກໃຫ້ປະຊາຊົນທຸກຄົນຂອງພຣະຢາເວ
ເປັນຜູ້ທຳນວາຍ ແລະເພື່ອທີ່ພຣະອົງ
ຈະໃສ່ພຣະວິນຍານຂອງພຣະອົງລົງເທິງພວກເຂົາທຸກຄົນ!" 30ແລ້ວໂມເຊແລະພວກຜູ້ໃຫຍ່ຂອງອິດສະຣາເອນກໍກັບໄປຍັງຄ້າຍພັກ.
31ແລ້ວລົມກໍພັດມາຈາກພຣະຢາເວ ແລະຫອບເອົານົກຂຸ້ມມາຈາກທະເລ. ພວກນົກເຫລົ່ານັ້ນກໍມາຕົກຢູ່ໃກ້ຄ້າຍພັກ,
ຊຶ່ງເດີນທາງໄປເຖິງປະມານຫນຶ່ງມື້ແລະເດີນທາງກັບມາປະມານຫນຶ່ງມື້. ນົກຂຸ້ມກໍຕົກຢູ່ອ້ອມຄ້າຍພັກສູງຈາກພື້ນດິນປະມານຫນຶ່ງສອກ.
32ປະຊາຊົນກໍມ່ວນຢູ່ກັບການຈັບນົກຂຸ້ມຢູ່ຕະຫລອດທັງວັນ, ທັງຄືນ, ແລະຕະຫລອດມື້ຕໍ່ມາດ້ວຍ. ບໍ່ມີໃຜທີ່ຈັບນົກຂຸ້ມໄດ້ຕໍ່າກວ່າ ສິບໂຮເມີ.
ພວກເຂົາແບ່ງນົກຂຸ້ມໃຫ້ແກ່ກັນທົ່ວຄ້າຍພັກ.


generated on Tue Jun 17 19:01:42 2025

[33]ໃນຂະນະທີ່ຊີ້ນນົກຍັງຕິດແຂ້ວພວກເຂົາຢູ່, ໃນຂະນະທີ່ກຳລັງຫຍໍ້າຊີ້ນນັ້ນຢູ່, ພຣະຢາເວ ກໍໂກດຮ້າຍພວກເຂົາ.
ພຣະອົງຊົງຂ້າຄົນເຫລົ່ານັ້ນດ້ວຍພະຍາດຮ້າຍແຮງ.[34]ເຂົາຈຶ່ງເອີ້ນສະຖານທີ່ນັ້ນວ່າ ກິບໂຣດຮັດຕາອາວາ,
ເພາະທີ່ນັ້ນພວກເຂົາໄດ້ຝັງສົບຄົນເຫລົ່ານັ້ນທີ່ຢາກກິນແຮງ.[35]ປະຊາຊົນໄດ້ເດີນທາງຈາກກິບໂຣດຮັດຕາອາວາໄປຍັງຮາເຊໂຣດ,
ທີ່ພວກເຂົາໄດ້ຕັ້ງຄ້າຍພັກ.

 generated on Tue Jun 17 19:01:42 2025

12 [1]ມີຣີອາມແລະອາໂຣນໄດ້ເວົ້າຕໍ່ຕ້ານໂມເຊ ເພາະເຫດຍິງຊາວກູເຊທີ່ເພິ່ນແຕ່ງງານດ້ວຍ.[2]ພວກເຂົາໄດ້ກ່າວວ່າ, "ພຣະຢາເວບອກກັບໂມເຊ
ຄົນດຽວເທົ່ານັ້ນບໍ? ພຣະອົງບໍ່ໄດ້ບອກກັບພວກເຮົາບໍ? "ໃນຂະນະນັ້ນພຣະຢາເວຊົງໄດ້ຍິນໃນສິ່ງທີ່ພວກເຂົາເວົ້າ.
[3]ໂມເຊເປັນຄົນທີ່ອ່ອນນ້ອມຖ່ອມຕົວທີ່ສຸດ, ຖ່ອມໃຈຫລາຍກວ່າທຸກຄົນເທິງແຜ່ນດິນໂລກ.

[4]ໃນທັນໃດນັ້ນ ພຣະຢາເວ ກໍໄດ້ບອກກັບໂມເຊ, ອາໂຣນ, ແລະມີຣີອາມວ່າ: " ພວກເຈົ້າ, ທັງສາມຄົນຈົ່ງອອກໄປທີ່ຫໍເຕັນປະຊຸມ."
ດັ່ງນັ້ນພວກເຂົາທັງສາມຄົນຈຶ່ງອອກໄປ.[5]ແລ້ວພຣະຢາເວ ກໍສະເດັດລົງມາໃນເສົາເມກ. ພຣະອົງໄດ້ຢືນຢູ່ທີ່ທາງເຂົ້າຫໍເຕັນປະຊຸມ
ແລະຊົງເອີ້ນອາໂຣນ ແລະ ມີຣີອາມ. ພວກເຂົາທັງສອງຄົນກໍອອກມາຂ້າງຫນ້າ.
[6]ພຣະຢາເວໄດ້ກ່າວວ່າ," ບັດນີ້ຈົ່ງຟັງຖ້ອຍຄໍາຂອງເຮົາ. ເມື່ອຜູ້ທໍານວາຍຂອງເຮົາຢູ່ທ່າມກາງພວກເຈົ້າ,
ເຮົາຈະສະແດງຕົວເຮົາເອງຕໍ່ເຂົາໃນນິມິດ ແລະເວົ້າກັບເຂົາໃນຄວາມຝັນ.[7]ແຕ່ໂມເຊຜູ້ຮັບໃຊ້ຂອງເຮົາ, ບໍ່ໄດ້ເປັນເຊັ່ນນັ້ນ
ໃນຄົວເຮືອນທັງຫມົດຂອງເຮົາ ເຂົາເປັນຄົນສັດຊື່.[8]ເຮົາເວົ້າກັບໂມເຊຫນ້າຕໍ່ຫນ້າ, ບໍ່ໄດ້ເວົ້າດ້ວຍນິມິດຫລືຄໍາປິດສະຫນາ.
ເຂົາໄດ້ເຫັນຮູບຮ່າງຂອງເຮົາ. ດັ່ງນັ້ນເປັນຫຍັງພວກເຈົ້າຈຶ່ງກ້າເວົ້າຕໍ່ສູ້, ໂມເຊ ຜູ້ຮັບໃຊ້ຂອງເຮົາ?"
[9]ພຣະຢາເວໄດ້ໂກດຮ້າຍພວກເຂົາຢ່າງຮຸນແຮງຕໍ່ເຂົາທັງສອງຄົນ, ແລະພຣະອົງກໍຈາກພວກເຂົາໄປ.[10]ເມກກໍລອຍຂຶ້ນໄປຈາກເຕັນນັ້ນ,
ແລະໃນທັນໃດ ມີຣີອາມກໍເກີດພະຍາດຂີ້ທູດ ຜິວຫນັງຂາວດັ່ງນວນຝ້າຍ. ເມື່ອອາໂຣນຫລຽວມາເບິ່ງ ມີຣີອາມ, ເພິ່ນກໍວ່ານາງເປັນຂີ້ທູດ.
[11]ອາໂຣນຈຶ່ກ່າວກັບໂມເຊວ່າ," ໂອ, ເຈົ້ານາຍຂອງຂ້ານ້ອຍ, ຂໍຢ່າໃຫ້ພວກເຮົາໄດ້ຮັບໂທດຍ້ອນບາບກໍານີ້ເລີຍ. ພວກເຮົາເວົ້າຢ່າງໂງ່ຈ້າ,
ແລະພວກເຮົາໄດ້ເຮັດບາບແລ້ວ.[12]ຂໍຢ່າໃຫ້ນາງເປັນດັ່ງເດັກນ້ອຍເກີດໃຫມ່ທີ່ຕາຍແລ້ວ ຜູ້ທີ່ມີເນື້ອຫນັງກຸດໄປເຄິ່ງຫນຶ່ງ
ຕອນທີ່ເກີດອອກມາຈາກທ້ອງແມ່."
[13]ດັ່ງນັ້ນໂມເຊຈຶ່ງຮ້ອງຕໍ່ພຣະເຈົ້າຢາເວ. ກ່າວວ່າ, "ຂ້າແດ່ພຣະເຈົ້າ,
ຂໍຊົງໂຜດຮັກສານາງໃຫ້ຫາຍດີດ້ວຍເຖີດ."[14]ພຣະຢາເວກ່າວກັບໂມເຊວ່າ," ຖ້າພໍ່ຂອງນາງຖົ່ມນໍ້າລາຍໃສ່ຫນ້າຂອງນາງ,
ນາງກໍຈະອັບອາຍໄປເຈັດວັນ. ຈົ່ງກັກຕົວນາງໄວ້ນອກຄ້າຍເຈັດວັນ. ຫລັງຈາກນັ້ນ ຈຶ່ງພານາງເຂົ້າມາອີກຄັ້ງ."[15]ດັ່ງນັ້ນ ມີຣີອາມ
ຈຶ່ງຖືກກັກຕົວໄວ້ນອກຄ້າຍພັກເປັນເວລາເຈັດວັນ. ປະຊາຊົນກໍບໍ່ໄດ້ຍົກຍ້າຍໄປໃສ ຈົນກວ່ານາງໄດ້ກັບມາຍັງຄ້າຍພັກ.
[16]ຫລັງຈາກນັ້ນປະຊາຊົນກໍອອກເດີນທາງໄປຈາກ ຮາຊີໂຣດແລະຕັ້ງຄ້າຍພັກໃນຖິ່ນທຸລະກັນດານ.


generated on Tue Jun 17 19:01:42 2025

# 13

[1]ຈາກນັ້ນພຣະຢາເວໄດ້ບອກກັບໂມເຊ. ພຣະອົງກ່າວວ່າ,[2]" ຈົ່ງສົ່ງບາງຄົນໄປສອດແນມແຜ່ນດິນການາອານ,
ທີ່ເຮົາໄດ້ມອບໃຫ້ແກ່ຊາວອິດສະຣາເອນ. ຈົ່ງສົ່ງຄົນຈາກທຸກເຜົ່າຂອງບັນພະບູລຸດຂອງພວກເຂົາ. ເຜົ່າລະຄົນ
ແຕ່ລະຄົນຕ້ອງເປັນຜູ້ນໍາທ່າມກາງພວກເຂົາ."

[3]ປາຣານ, ເພື່ອໃຫ້ພວກເຂົາເຮັດຕາມຄໍາສັ່ງຂອງພຣະຢາເວ. ພວກເຂົາທຸກຄົນເປັນຜູ້ນໍາທ່າມກາງຄົນອິດສະຣາເອນ.
[4]ຕໍ່ໄປນີ້ເປັນລາຍຊື່ຂອງພວກເຂົາ: ຈາກເຜົ່າຣູເບັນ, ຊາມມູອາລູກຊາຍຂອງຊັກກູເຣ;
[5]ຈາກເຜົ່າ, ຊາຟັດ ລູກຊາຍຂອງໂຮຣີ;[6]ຈາກເຜົ່າຢູດາ, ກາເຣັບ ລູກຊາຍຂອງເຢຟຸນເນ;[7]ຈາກເຜົ່າອິດຊາຄາ, ອີການລູກຊາຍຂອງໂຢເຊັບ;
[8]ຈາກເຜົ່າເອຟຣາອິມ, ໂຮເຊຢາລູກຊາຍຂອງນູນ;
[9]ຈາກເຜົ່າເບັນຢາມິນ, ປານຕີລູກຊາຍຂອງຣາຟູ;[10]ຈາກເຜົ່າເຊບູໂລນ, ກາດດີເອນລູກຊາຍຂອງໂສດີ;
[11]ຈາກເຜົ່າໂຢເຊັບ(ນັ້ນເປັນການບອກວ່າຈາກເຜົ່າມານັດເຊ), ກາດດີລູກຊາຍຂອງສູສີ;[12]ຈາກເຜົ່າດານ, ອາມມີເອນລູກຊາຍຂອງເກມາລີ;
[13]ຈາກເຜົ່າອາເຊ, ເສທູເຣລູກຊາຍຂອງມີກາເອນ;[14]ຈາກເຜົ່າເນັບທາລີ, ນາບີລູກຊາຍຂອງວົບສີ;[15]ຈາກເຜົ່າກາດ, ເກອູເອນລູກຊາຍຂອງມາກີ;
[16]ເຫລົ່ານີ້ເປັນລາຍຊື່ຂອງຄົນທີ່ໂມເຊໄດ້ສົ່ງໄປສອດແນມແຜ່ນດິນນັ້ນ. ໂມເຊເອີ້ນໂຮເຊຢາລູກຊາຍ ຂອງນູນໂດຍໃຊ້ຊື່ວ່າ ໂຢຊວຍ.
[17]ໂມເຊສົ່ງພວກເຂົາໄປສອດແນມແຜ່ນດິນການາອານ. ເພິ່ນບອກພວກເຂົາວ່າ," ຈົ່ງເຂົ້າໄປຕັ້ງແຕ່ ເນເກບແລະຂຶ້ນໄປຍັງເຂດແດນເນີນພູ.
[18]ຈົ່ງສໍາຫລວດເບິ່ງແຜ່ນດິນນັ້ນ ເພື່ອເບິ່ງວ່າແຜ່ນດິນນັ້ນເປັນຢ່າງໃດ. ຈົ່ງສັງເກດເບິ່ງຄົນທີ່ອາໃສຢູ່ທີ່ນັ້ນວ່າ, ພວກເຂົາເຂັ້ມແຂງຫລືອ່ອນແອ,
ແລະພວກເຂົາມີຈໍານວນນ້ອຍຫລືຫລາຍ.[19]ຈົ່ງເບິ່ງວ່າແຜ່ນດິນທີ່ພວກເຂົາອາໄສຢູ່ເປັນຢ່າງໃດ. ດີຫລືບໍ່ດີ? ບັນດາເມືອງທີ່ນັ້ນເປັນຢ່າງໃດ?
ເມືອງເຫລົ່ານັ້ນເປັນຄ້າຍພັກ, ຫລືເປັນເມືອງທີ່ມີກໍາແພງປ້ອງກັນ?[20]ຈົ່ງເບິ່ງວ່າແຜ່ນດິນນັ້ນເປັນຢ່າງໃດ,
ແຜ່ນດິນສໍາລັບການປູກຝັງນັ້ນອຸດົມສົມບູນຫລືບໍ່, ແລະມີຕົ້ນໄມ້ຢູ່ທີ່ນັ້ນຫລືບໍ່.
ຈົ່ງກ້າຫານເຖີດແລະນໍາຕົວຢ່າງຫມາກໄມ້ບາງຊະນິດຂອງແຜ່ນດິນນັ້ນມາດ້ວຍ." ເວລານີ້ເປັນລະດູທີ່ຫມາກອະງຸ່ນລຸ້ນທໍາອິດສຸກ.
[21]ດັ່ງນັ້ນຄົນເຫລົ່ານັ້ນຈຶ່ງຂຶ້ນໄປແລະສອດແນມເບິ່ງແຜ່ນດິນນັ້ນ ຕັ້ງແຕ່ຖິ່ນທຸລະກັນດານ ຊິນ ຈົນເຖິງເຣໂຮບ, ໃກ້ກັບເມືອງເລໂບ ຮາມັດ.
[22]ພວກເຂົາຂຶ້ນໄປຈາກເນເກບແລະມາເຖິງເມືອງ ເຮັບໂຣນ. ມີຄົນອາຮີມານ, ຄົນເຊຊາຍ, ແລະຄົນຕານໄມ,
ຊຶ່ງເປັນເຊື້ອສາຍຂອງຊົນຊາດອານາກິມ, ຢູ່ທີ່ນັ້ນ. ເມືອງເຮັບໂຣນໄດ້ຖືກສ້າງຂຶ້ນກ່ອນເມືອງໂຊອານໃນເອຢິບເຈັດປີ.
[23]ພວກເຂົາກໍຕັດເອົາງ່າອະງຸ່ນງ່າຫນຶ່ງທີ່ມີຫມາກດົກຫລາຍ. ພວກເຂົາຕ້ອງໃຊ້ສອງຄົນໃນກຸ່ມພວກເຂົາຫາມພວງອະງຸ່ນນັ້ນດ້ວຍໄມ້ຄານ.
ພວກເຂົາຍັງເອົາຫມາກພິລາແລະຫມາກເດືອມາດ້ວຍ.[24]ສະຖານທີ່ນັ້ນຈຶ່ງຖືກເອີ້ນວ່າ ຮ່ອມພູເອັດຊະໂຄນ,
ເພາະພົວອະງຸ່ນທີ່ຄົນອິດສະຣາເອນໄດ້ຕັດມາຈາກທີ່ນັ້ນ.
[25]ຫລັງຈາກນັ້ນສີ່ສິບວັນ, ພວກເຂົາກໍກັບມາຈາກການສອດແນມແຜ່ນດິນນັ້ນ.[26]ພວກເຂົາກັບມາຫາໂມເຊ, ອາໂຣນ,
ແລະຊຸມຊົນທັງຫມົດຂອງຄົນອິດສະຣາເອນ ໃນຖິ່ນທຸລະກັນດານ ປາຣານ, ທີ່ກາເດັດ.
ພວກເຂົາໄດ້ກັບມາລາຍງານຕໍ່ເພິ່ນທັງສອງແລະຊຸມຊົນທັງຫມົດ, ແລະໃຫ້ພວກເຂົາເບິ່ງຫມາກໄມ້ທີ່ນໍາມາຈາກແຜ່ນດິນນັ້ນ.
[27]ພວກເຂົາບອກໂມເຊວ່າ, "ເຮົາໄດ້ໄປເຖິງແຜ່ນດິນທີ່ທ່ານໄດ້ສົ່ງເຮົາໄປ. ແຜ່ນດິນນັ້ນອຸດົມດ້ວຍນໍ້ານົມແລະນໍ້າເຜິ້ງແທ້ໆ.
ນີ້ເປັນຫມາກໄມ້ຈໍານວນຫນຶ່ງຈາກແຜ່ນດິນນັ້ນ.[28]ແຕ່ຢ່າງໃດກໍຕາມ, ຄົນທີ່ສ້າງບ້ານເຮືອນຂອງພວກເຂົາທີ່ນັ້ນເປັນຄົນແຂງແຮງຫລາຍ.
ເມືອງເຫລົ່ານັ້ນມີກໍາແພງປ້ອງກັນແລະໃຫຍ່ໂຕຫລາຍ. ເຮົາໄດ້ເຫັນເຊື້ອສາຍຂອງຄົນອານາກິມທີ່ນັ້ນດ້ວຍ.[29]ຄົນອາມາເຫລັກອາໄສຢູ່ໃນ
ເນເກບ. ຄົນຮິດຕີ, ຄົນເຢບຸດ, ແລະຄົນອາໂມຣິດມີບ້ານເຮືອນຂອງພວກເຂົາໃນເຂດແດນເນີນພູ.
ຄົນການາອານອາໃສຢູ່ໃກ້ທະເລແລະຕາມຝັ່ງແມ່ນໍ້າຈໍແດນ."
[30]ແລ້ວກາເລັບໄດ້ໃຫ້ປະຊາຊົນງຽບຕໍ່ຫນ້າໂມເຊແລະກ່າວວ່າ, "ໃຫ້ເຮົາຂຶ້ນໄປແລະຍຶດຄອງແຜ່ນດິນນັ້ນ,
ເພາະເຮົາສາມາດຊະນະເມືອງນັ້ນໄດ້ແນ່ນອນ."[31]ແຕ່ຄົນອື່ນໆທີ່ໄດ້ໄປກັບເຂົາຕອບວ່າ," ພວກເຮົາບໍ່ສາມາດຕໍ່ສູ້ກັບຄົນເຫລົ່ານັ້ນໄດ້
ເພາະພວກເຂົາແຂງແກ່ນກວ່າພວກເຮົາ."
[32]ດັ່ງນັ້ນພວກເຂົາກໍລາຍງານກ່ຽວກັບແຜ່ນດິນທີ່ພວກເຂົາໄປສອດແນມມາໃຫ້ຮູ້ກັນຫມົດ ທີ່ເຮັດໃຫ້ຄົນອິດສະຣາເອນເກີດຄວາມທໍ້ຖອຍ.
ພວກເຂົາກ່າວວ່າ, "ແຜ່ນດິນທີ່ເຮົາໄດ້ໄປເຫັນມາເປັນແຜ່ນດິນທີ່ກິນຄົນ. ທຸກຄົນທີ່ເຮົາໄດ້ເຫັນທີ່ນັ້ນເປັນຄົນທີ່ສູງໃຫຍ່ຫລາຍ.
[33]ທີ່ນັ້ນເຮົາໄດ້ເຫັນຍັກ, ທີ່ເປັນເຊື້ອສາຍຄົນອານາກິມ, ຄົນທີ່ມາຈາກພວກຍັກໃນສາຍຕາຂອງພວກເຮົາ.
ເຮົາເປັນເຫມືອນຕັກແຕນເມື່ອປຽບທຽບກັບພວກເຂົາ, ແລະນີ້ກໍເປັນສິ່ງທີ່ເຮົາເປັນໃນສາຍຕາຂອງພວກເຂົາ, ດ້ວຍ."

# 14

[1]ໃນຄືນນັ້ນຊຸມຊົນທັງຫມົດກໍຮ້ອງໃຫ້ສຽງດັງ.[2]ຄົນອິດສະຣາເອນທັງຫມົດກໍຕໍ່ວ່າໂມເຊ ແລະອາໂຣນ. ຊຸມຊົນທັງຫມົດກ່າວກັບເພິ່ນທັງສອງວ່າ,
"ເຮົາຢາກຈະຕາຍເສຍໃນແຜ່ນດິນເອຢິບ, ແລະໃນຖິ່ນທຸລະກັນດານທີ່ນີ້!
[3]ເປັນຫຍັງພຣະຢາເວຈຶ່ງຊົງນໍາພວກເຮົາມາຍັງແຜ່ນດິນນີ້ເພື່ອທີ່ຈະຕາຍດ້ວຍດາບ? ເມຍແລະລູກນ້ອຍໆຂອງເຮົາກໍຈະກາຍເປັນຜູ້ຮັບເຄາະ.
ໃຫ້ພວກເຮົາກັບໄປທີ່ເອຢິບບໍ່ດີກ່ວາບໍ?"

[4]ໃຫ້ພວກເຮົາເລືອກຜູ້ນໍາອີກຄົນຫນຶ່ງ, ແລະໃຫ້ພວກເຮົາກັບໄປທີ່ເອຢິບ, "[5]ແລ້ວໂມເຊ
ແລະອາໂຣນກໍຫມູບຫນ້າລົງຕໍ່ຫນ້າທີ່ປະຊຸມຂອງຊຸມຊົນຄົນອິດສະຣາເອນ.
[6]ໂຢຊວຍລູກຊາຍຂອງນູນ ແລະກາເລັບລູກຊາຍຂອງເຢຟູນເນ, ທັງສອງຄົນທີ່ຢູ່ໃນພວກຄົນເຫລົ່ານັ້ນທີ່ຖືກສົ່ງໄປສອດແນມແຜ່ນດິນນັ້ນ,
ກໍໄດ້ຈີກເສື້ອຜ້າຂອງຕົນ.[7]ພວກເຂົາເວົ້າກັບຊຸມຊົນຄົນອິດສະຣາເອນທັງຫມົດ. ພວກເຂົາບອກວ່າ,
"ແຜ່ນດິນທີ່ພວກເຮົາໄດ້ເຂົ້າໄປສໍາຫລວດຈົນທົ່ວນັ້ນເປັນແຜ່ນດິນທີ່ດີຫລາຍ.[8]ຖ້າພຣະຢາເວຊົງພໍພຣະໄທພວກເຮົາແລ້ວ,
ພຣະອົງຈະຊົງນໍາພວກເຮົາເຂົ້າສູ່ແຜ່ນດິນນັ້ນ ແລະປະທານແຜ່ນດິນນັ້ນແກ່ພວກເຮົາ. ແຜ່ນດິນທີ່ອຸດົມດ້ວຍນໍ້ານົມແລະນໍ້າເຜີ້ງ.
[9]ແຕ່ຂໍຢ່າກະບົດຕໍ່ພະຢາເວ, ແລະຢ່າຢ້ານຄົນໃນແຜ່ນດິນນັ້ນເລີຍ. ພວກເຮົາຈະທໍາລາຍພວກເຂົາໃຫ້ຫມົດໄດ້ຢ່າງງ່າຍໆເຫມືອນກັບອາຫານ.
ເກາະກໍາບັງຂອງພວກເຂົາຈະຖືກເອົາອອກໄປຈາກພວກເຂົາ, ເພາະພຣະຢາເວ ຊົງສະຖິດກັບເຮົາ.
ຢ່າຢ້ານພວກເຂົາເລີຍ."[10]ແຕ່ຊຸມຊົນທັງຫມົດໄດ້ຂູ່ວ່າຈະເອົາກ້ອນຫີນແກວ່ງໃສ່ພວກເຂົາໃຫ້ຕາຍ. ແລ້ວພຣະສະຫງ່າຣາສີຂອງ ພຣະຢາເວ
ກໍໄດ້ປາກົດທີ່ຫໍເຕັນບ່ອນປະຊຸມຕໍ່ຫນ້າຄົນອິດສະລາເອນທັງຫມົດ.
[11]ພຣະຢາເວກ່າວກັບໂມເຊວ່າ," ຄົນເຫລົ່ານີ້ຈະຫມິ່ນປະຫມາດເຮົາດົນປານໃດ? ພວກເຂົາຈະບໍ່ມີຄວາມວາງໃຈເຮົາດົນປານໃດ,
ທັງໆທີ່ເຮົາໄດ້ເຮັດຫມາຍສໍາຄັນແຫ່ງລິດອໍານາດຂອງເຮົາທັງຫມົດທ່າມກາງພວກເຂົາ?[12]ເຮົາຈະຂ້າພວກເຂົາດ້ວຍໄພພິບັດ,
ຕັດສິດທິພວກເຂົາຈາກມໍລະດົກ, ແລະສ້າງຊົນຊາດຫນຶ່ງຈາກຕະກຸນຂອງເຈົ້າເອງໃຫ້ຍິ່ງໃຫຍ່ແລະເຂັ້ມແຂງກວ່າພວກເຂົາ."
[13]ໂມເຊໄດ້ຕອບພຣະຢາເວວ່າ, "ຖ້າພຣະອົງຊົງເຮັດເຊັ່ນນັ້ນ, ແລ້ວຊາວເອຢິບກໍຈະໄດ້ຍິນກ່ຽວກັບເລື່ອງນີ້,
ເພາະພຣະອົງຊົງຊ່ວຍຄົນເຫລົ່ານີ້ໃຫ້ລອດຊີວິດດ້ວຍລິດອໍານາດຂອງພຣະອົງ.[14]ພວກເຂົາຈະບອກເລື່ອງນີ້ຕໍ່ຜູ້ອາໄສຢູ່ໃນແຜ່ນດິນນີ້
ພວກເຂົາໄດ້ຍິນວ່າພຣະອົງ, ພຣະຢາເວ, ໄດ້ຊົງສະຖິດກັບຄົນເຫລົ່ານີ້, ເພາະພວກເຂົາໄດ້ເຫັນພຣະອົງຫນ້າຕໍ່ຫນ້າ.
ເມກຂອງພຣະອົງຕັ້ງຢູ່ເຫນືອຄົນເຫລົ່ານັ້ນ. ພຣະອົງຊົງນໍາຫນ້າພວກເຂົາໄປໃນເສົາເມກໃນຕອນກາງເວັນແລະເປັນເສົາໄຟໃນຕອນກາງຄືນ.
[15]ຖ້າພຣະອົງຊົງຂ້າຄົນເຫລົ່ານີ້ເຫມືອນກັບຄົນດຽວ, ແລ້ວຊົນຊາດຕ່າງໆກໍຈະໄດ້ຍິນເຖິງຊື່ສຽງຂອງພຣະອົງ ກໍຈະເວົ້າກັນແລະກ່າວວ່າ,[16]ເພາະ
ພຣະຢາເວ ບໍ່ສາມາດພາຄົນເຫລົ່ານັ້ນໄປຍັງແຜ່ນດິນທີ່ພຣະອົງຊົງສັນຍາວ່າຈະມອບໃຫ້ແກ່ພວກເຂົາໄດ້,
ພຣະອົງຈຶ່ງຂ້າພວກເຂົາໃນຖິ່ນທຸລະກັນດານ.'
[17]ບັດນີ້, ຂ້ານ້ອຍຂໍວິງວອນຕໍ່ພຣະອົງ, ຂໍຊົງໃຊ້ລິດອໍານາດຍິ່ງໃຫຍ່ຂອງພຣະອົງ. ເພາະພຣະອົງໄດ້ກ່າວໄວ້ວ່າ,[18]'ພຣະຢາເວຜູ້ຮ້າຍຊ້າ
ແລະເຕັມລົ້ນດ້ວຍຄວາມສັດຊື່ໃນພັນທະສັນຍາ. ພຣະອົງໃຫ້ອະໄພຄວາມຊົ່ວຮ້າຍແລະການກະບົດ. ພຣະອົງຈະບໍ່ຊົງລະເວັ້ນຄວາມຜິດ
ເມື່ອພຣະອົງຊົງນໍາການລົງໂທດບາບຂອງບັນພະບູລຸດ, ຕົກທອດໄປເຖິງລູກຫລານຂອງພວກເຂົາແລະສີ່ຊົ່ວອາຍຸຄົນ.'[19]ຂ້ານ້ອຍ,
ຂໍວິງວອນຕໍ່ພຣະອົງ, ຂໍຊົງອະໄພບາບຄົນເຫລົ່ານັ້ນ ເພາະຄວາມຮັກຍິ່ງໃຫຍ່ແຫ່ງຄວາມສັດຊື່ໃນພັນທະສັນຍາຂອງພຣະອົງ,
ເຫມືອນດັ່ງທີ່ພຣະອົງຊົງອະໄພຄົນເຫລົ່ານີ້ມາ ຕັ້ງແຕ່ພວກເຂົາຢູ່ໃນເອຢິບ ຈົນເຖິງບັດນີ້."
[20]ພຣະຢາເວກ່າວວ່າ, "ເຮົາຍົກໂທດໃຫ້ພວກເຂົາເພື່ອເປັນໄປຕາມຄໍາຂໍຮ້ອງຂອງເຈົ້າ,[21]ແຕ່ແທ້ຈິງ, ເຮົາມີຊີວິດຢູ່ສັນໃດ,
ແລະແຜ່ນດິນໂລກທັງຫມົດນີ້ກໍຈະເຕັມດ້ວຍພຣະສະຫງ່າຣາສີຂອງເຮົາສັນນັ້ນ,[22]ຄົນເຫລົ່ານັ້ນທີ່ໄດ້ເຫັນພຣະສະຫງ່າຣາສີຂອງເຮົາ
ແລະຫມາຍສໍາຄັນແຫ່ງຣິດອໍານາດທີ່ເຮົາໄດ້ກະທໍາ ໃນເອຢິບ ແລະໃນຖິ່ນທຸລະກັນດານ ແຕ່ພວກເຂົາກໍຍັງທົດລອງເຮົາເຖິງສິບເທື່ອ
ແລະບໍ່ຟັງສຽງຂອງເຮົາ.
[23]ດັ່ງນັ້ນພວກເຂົາຈະບໍ່ໄດ້ເຫັນແຜ່ນດິນທີ່ເຮົາໄດ້ສັນຍາໄວ້ກັບບັນພະບູລຸດຂອງພວກເຂົາຢ່າງແນ່ນອນ.
ບໍ່ມີໃຜຈັກຄົນໃນພວກເຂົາທີ່ຫມິ່ນປະຫມາດເຮົາຈະໄດ້ເຫັນແຜ່ນດິນນັ້ນ,[24]ຍົກເວັ້ນກາເລັບ, ຜູ້ຮັບໃຊ້ຂອງເຮົາທີ່ມີວິນຍານແຕກຕ່າງກັນ.
ເຂົາໄດ້ຕິດຕາມເຮົາຢ່າງສຸດໃຈ; ເຮົາຈະນໍາເຂົາເຂົ້າສູ່ແຜ່ນດິນທີ່ເຂົາໄດ້ໄປສອດແນມມານັ້ນ.
ເຊື້ອສາຍຂອງເຂົາຈະໄດ້ແຜ່ນດິນເປັນກໍາມະສິດ.[25](ໃນເວລານັ້ນຄົນອາມາເຫລັກແລະຄົນການາອານອາໃສຢູ່ໃນຮ່ອມພູນັ້ນ.)
ໃນມື້ອື່ນຈົ່ງກັບຄືນແລະໄປຍັງຖິ່ນທຸລະກັນດານຕາມທາງໄປທະເລແດງ."
[26]ພຣະຢາເວໄດ້ກ່າວກັບໂມເຊແລະກັບອາໂຣນ. ພຣະອົງກ່າວວ່າ,[27]ເຮົາຕ້ອງທົນຕໍ່ຊຸມຊົນຊົ່ວຮ້າຍນີ້ທີ່ຈົ່ມວ່າໃສ່ເຮົານານປານໃດ?
ເຮົາໄດ້ຍິນຄົນອິດສະຣາເອນຈົ່ມວ່າເຮົາພຽງພໍແລ້ວ.
[28]ຈົ່ງບອກພວກເຂົາວ່າ,' ພຣະຢາເວກ່າວວ່າ,' ເຮົາມີຊີວິດຢູ່ສັນໃດ, ເຮົາຈະເຮັດຕໍ່ພວກເຈົ້າ, ຕາມທີ່ພວກເຈົ້າໄດ້ຂໍຮ້ອງເຮົາສັນນັ້ນ:
[29]ຊາກສົບຂອງພວກເຈົ້າຈະຕົກລົ່ນຢູ່ໃນຖິ່ນທຸລະກັນດານນີ້, ພວກເຈົ້າທຸກຄົນທີ່ໄດ້ຈົ່ມວ່າເຮົາ,
ພວກເຈົ້າທີ່ໄດ້ຖືກນັບໄວ້ໃນການເຮັດສໍາມະໂນຄົວ, ຈໍານວນຄົນທັງຫມົດຕັ້ງແຕ່ອາຍຸຊາວປີຂຶ້ນໄປ.[30]ພວກເຈົ້າຈະບໍ່ໄດ້ເຂົ້າໄປໃນແຜ່ນດິນ
ທີ່ເຮົາສັນຍາວ່າ ຈະສ້າງບ້ານຂອງພວກເຈົ້າຢ່າງແນ່ນອນ, ຍົກເວັ້ນກາເລັບລູກຊາຍຂອງເຢຟຸນເນ ແລະໂຢຊວຍລູກຊາຍຂອງນູນ.
[31]ແຕ່ລູກນ້ອຍຂອງພວກເຈົ້າ ທີ່ພວກເຈົ້າບອກວ່າເປັນຜູ້ຮັບເຄາະນັ້ນ, ເຮົາຈະພາພວກເຂົາເຂົ້າໄປໃນແຜ່ນດິນນັ້ນ.
ພວກເຂົາຈະໄດ້ຮັບແຜ່ນດິນນັ້ນທີ່ພວກເຈົ້າປະຕິເສດ![32]ແຕ່ສໍາລັບພວກເຈົ້າ, ຊາກສົບຂອງເຈົ້າຈະຕົກລົ່ນໃນຖິ່ນທຸລະກັນດານນີ້.
[33]ລູກຫລານຂອງພວກເຈົ້າຈະເປັນຄົນລ້ຽງແກະໃນຖິ່ນທຸລະກັນດານເປັນເວລາສີ່ສິບປີ. ພວກເຂົາຕ້ອງຮັບຜົນທີ່ຕາມມາ
ຈາກການກະບົດຂອງພວກເຈົ້າ ແລະຈົນກວ່າຊາກສົບຂອງພວກເຈົ້າຈະຄົບຈໍານວນໃນຖິ່ນທຸລະກັນດານ.
[34]ຕາມຈໍານວນວັນທີ່ພວກເຈົ້າໄດ້ໄປສອດແນມແຜ່ນດິນນັ້ນ ເປັນເວລາ – ສີ່ສິບວັນ,
ພວກເຈົ້າຕ້ອງຮັບຜົນທີ່ຕາມມາຂອງບາບຂອງພວກເຈົ້າເປັນເວລາສີ່ສິບປີເຊັ່ນດຽວກັນ – ຫນຶ່ງປີຄືແຕ່ລະວັນ,


generated on Tue Jun 17 19:01:42 2025

ແລະພວກເຈົ້າຈະຕ້ອງຮູ້ວ່າການເປັນສັດຕູຕໍ່ເຮົານັ້ນເປັນຢ່າງໃດ.[35]ເຮົາ, ຄືພຣະຢາເວ, ໄດ້ກ່າວໄວ້ແລ້ວ.
ເຮົາຈະເຮັດຕໍ່ຊຸມຊົນທີ່ຊົ່ວຮ້າຍທັງຫມົດນີ້ ທີ່ລວມຕົວກັນຕໍ່ສູ້ເຮົາຢ່າງແນ່ນອນ. ພວກເຂົາຈະຖືກຕັດອອກຢ່າງສິ້ນເຊີງ,
ແລະພວກເຂົາຈະຕາຍທີ່ນີ້."'
[36]ດັ່ງນັ້ນພວກຄົນທີ່ໂມເຊໄດ້ສົ່ງໄປສອດແນມທີ່ແຜ່ນດິນນັ້ນກໍຕາຍທັງຫມົດດ້ວຍໄພພິບັດຕໍ່ພຣະພັກພຣະຢາເວ.
[37]ຄົນເຫລົ່ານີ້ເປັນຜູ້ທີ່ກັບມາແລະລາຍງານໃສ່ຮ້າຍຕໍ່ແຜ່ນດິນນັ້ນ. ນີ້ເຮັດໃຫ້ຊຸມຊົນທັງຫມົດນັ້ນຈົ່ມວ່າໃຫ້ໂມເຊ.
[38]ໃນບັນດາຄົນເຫລົ່ານັ້ນທີ່ໄດ້ເຂົ້າໄປເບິ່ງແຜ່ນດິນນັ້ນ, ມີພຽງໂຢຊວຍລູກຊາຍຂອງນູນ ແລະກາເລັບ
ລູກຊາຍຂອງເຢຟຸນເນເທົ່ານັ້ນທີ່ຍັງມີຊີວິດຢູ່.
[39]ເມື່ອໂມເຊເລົ່າຖ້ອຍຄໍາເຫລົ່ານັ້ນທັງຫມົດ, ພວກເຂົາກໍຮ້ອງໃຫ້ໂສກເສົ້າຢ່າງຫນັກ.[40]ພວກເຂົາລຸກຂຶ້ນແຕ່ເຊົ້າມືດໃນຕອນເຊົ້າ
ແລະຂຶ້ນໄປທີ່ເນີນພູສູງແລະເວົ້າວ່າ,"ເບິ່ງແມ, ພວກເຮົາຢູ່ທີ່ນີ້, ແລະເຮົາຈະໄປຍັງບ່ອນທີ່ ພຣະຢາເວ ໄດ້ຊົງສັນຍາໄວ້,
ເພາະພວກເຮົາໄດ້ເຮັດບາບແລ້ວ."
[41]ເປັນຫຍັງພວກເຈົ້າຈຶ່ງຂັດຂືນຄໍາສັ່ງຂອງພຣະຢາເວ? ພວກເຈົ້າຈະບໍ່ປະສົບຄວາມສໍາເລັດ.[42]ຢ່າໄປເລີຍ,
ເພາະພຣະຢາເວບໍ່ໄດ້ຊົງສະຖິດຢູ່ກັບພວກເຈົ້າ ເພື່ອປົກປ້ອງພວກເຈົ້າຈາກການໂຈມຕີຂອງສັດຕູຂອງພວກເຈົ້າ.
[43]ຄົນອາມາເລກແລະຄົນການາອານຢູ່ທີ່ນັ້ນ, ແລະພວກເຈົ້າຈະຕ້ອງຕາຍດ້ວຍດາບ ເພາະພວກເຈົ້າຫັນກັບຈາກການຕິດຕາມພຣະຢາເວ.
ດັ່ງນັ້ນພຣະອົງຈະບໍ່ຊົງສະຖິດຢູ່ກັບພວກເຈົ້າ."
[44]ແຕ່ພວກເຂົາກໍຍັງຂຶ້ນໄປຍັງເຂດແດນເນີນພູສູງນັ້ນໂດຍພະລະການ; ເຖິງຢ່າງໃດກໍຕາມ, ບໍ່ວ່າໂມເຊຫລືຫີບແຫ່ງພັນທະສັນຍາຂອງ
ພຣະຢາເວ ກໍຈະບໍ່ໄດ້ອອກໄປຈາກຄ້າຍ.[45]ແລ້ວຄົນອາມາເລກກໍລົງມາ, ແລະຄົນການາອານທີ່ອາໄສຢູ່ເທິງເນີນພູເຫລົ່ານັ້ນກໍລົງມາດ້ວຍ.
ຄົນເຫລົ່ານັ້ນໄດ້ໂຈມຕີຄົນອິດສະຣາເອນແລະໄດ້ຊະນະພວກເຂົາ ມາຕາມທາງຈົນໄປເຖິງເມືອງໂຮມາ.

 generated on Tue Jun 17 19:01:42 2025

# 15

1ຕໍ່ມາພຣະຢາເວໄດ້ບອກກັບໂມເຊ. ພຣະອົງກ່າວວ່າ, 2'ຈົ່ງເວົ້າກັບຄົນອິດສະຣາເອນ ແລະບອກພວກເຂົາວ່າ,'
ເມື່ອພວກເຈົ້າເຂົ້າໄປໃນແຜ່ນດິນທີ່ພວກເຈົ້າຈະໄປອາໄສຢູ່, ທີ່ພຣະຢາເວຈະມອບໃຫ້ແກ່ພວກເຈົ້າ,
3ພວກເຈົ້າຕ້ອງຈັດຕຽມເຄື່ອງບູຊາທີ່ເຜົາດ້ວຍໄຟແດ່ພຣະຢາເວ, ບໍ່ວ່າຈະເປັນເຄື່ອງເຜົາບູຊາ ຫລືເຄື່ອງບູຊາເພື່ອແກ້ບະບົນ
ຫລືເຄື່ອງບູຊາດ້ວຍຄວາມສະໝັກໃຈ, ຫລືເຄື່ອງບູຊາຕອນເທດສະການງານລ້ຽງຂອງພວກເຈົ້າ,
ເພື່ອໃຫ້ມີກິ່ນຫອມທີ່ພໍພຣະໄທແດ່ພຣະຢາເວ ຈາກຝູງງົວ ຫລືຝູງແບ້ ແກະ.

4ພວກເຈົ້າຕ້ອງຖວາຍເຄື່ອງເຜົາບູຊາແດ່ພຣະຢາເວ ພ້ອມກັບການຖວາຍພືດຜົນບູຊາທີ່ເປັນແປ້ງຢ່າງດີ
ໜຶ່ງສ່ວນສິບເອຟາປົນກັບນໍ້າມັນໝາກກອກເທດໜຶ່ງລິດ. 5ພວກເຈົ້າຕ້ອງຖວາຍເຫລົ້າອະງຸ່ນໜຶ່ງລິດ, ຕໍ່ລູກແກະໜຶ່ງໂຕ,
ເປັນເຄື່ອງດື່ມບູຊາພ້ອມກັບເຄື່ອງເຜົາບູຊາຫລືເຄື່ອງສັດບູຊາດ້ວຍ.
6ຖ້າພວກເຈົ້າຖວາຍແກະຜູ້ໂຕໜຶ່ງ,
ພວກເຈົ້າຕ້ອງຈັດຕຽມແປ້ງຢ່າງດີສອງສ່ວນສິບເອຟາປົນກັບນໍ້າມັນໝາກກອກເທດເຄິ່ງລິດເປັນພືດຜົບູຊາ. 7ພວກເຈົ້າຕ້ອງຖວາຍເຫລົ້າອະງຸ່ນ,
ເຄິ່ງລິດເປັນເຄື່ອງດື່ມບູຊາ. ຊຶ່ງຈະເຮັດໃຫ້ມີກິ່ນຫອມແດ່ພຣະຢາເວ.
8ເມື່ອພວກເຈົ້າຈັດຕຽມງົວຜູ້ໂຕໜຶ່ງເປັນເຄື່ອງເຜົາບູຊາ, ຫລືເປັນເຄື່ອງບູຊາທີ່ແກ້ບະບົນຫລືເປັນເຄື່ອງສັນຕິບູຊາແດ່ພຣະຢາເວ,
9ແລ້ວພວກເຈົ້າກໍຕ້ອງຖວາຍເຄື່ອງພືດຜົນບູຊາທີ່ເປັນແປ້ງຢ່າງດີສາມສ່ວນສິບເອຟາປົນກັບນໍ້າມັນໝາກກອກເທດສອງລິດພ້ອມກັບງົວຜູ້ໂຕນັ້ນດ້ວຍ.
10ພວກເຈົ້າຕ້ອງຖວາຍເຫລົ້າອະງຸ່ນສອງລິດເປັນເຄື່ອງດື່ມບູຊາ, ເປັນເຄື່ອງບູຊາດ້ວຍໄຟ, ເພື່ອໃຫ້ມີກິ່ນຫອມແດ່ພຣະຢາເວ.
11ພວກເຈົ້າຕ້ອງເຮັດເຊັ່ນນີ້ສໍາລັບງົວຜູ້ແຕ່ລະໂຕ, ສໍາລັບແກະຜູ້ແຕ່ລະໂຕ, ແລະສໍາລັບລູກແກະໂຕຜູ້ຫລືລູກແບ້ແຕ່ລະໂຕ.
12ເຄື່ອງບູຊາທຸກຢ່າງທີ່ພວກເຈົ້າຈັດຕຽມແລະຖວາຍຕ້ອງເຮັດຕາມທີ່ກໍານົດໄວ້ໃນທີ່ນີ້.
13ຄົນອິດສະຣາເອນພື້ນເມືອງທຸກຄົນຕ້ອງເຮັດສິ່ງເຫລົ່ານີ້ຕາມວິທີການນີ້,
ເມື່ອຄົນໃດທີ່ນໍາເຄື່ອງບູຊາທີ່ເຜົາດ້ວຍໄຟມາເພື່ອໃຫ້ມີກິ່ນຫອມເປັນທີ່ພໍພຣະໄທແດ່ພຣະຢາເວ.
14ຖ້າຄົນຕ່າງຊາດທີ່ພັກອາໄສຢູ່ກັບພວກເຈົ້າ, ຫລືໃຜກໍຕາມທີ່ພັກອາໃສຢູ່ທ່າມກາງພວກເຈົ້າ ຕະຫລອດທຸກຊົ່ວອາຍຸຄົນຂອງພວກເຈົ້າ,
ເຂົາຕ້ອງຖວາຍເຄື່ອງບູຊາທີ່ເຜົາດ້ວຍໄຟ, ເພື່ອໃຫ້ມີກິ່ນຫອມແດ່ພຣະຢາເວ. ເຂົາຕ້ອງເຮັດເຫມືອນພວກເຈົ້າເຮັດ.
15ຕ້ອງມີກົດເກນຢ່າງດຽວກັນສໍາລັບຊຸມຊົນນີ້ ແລະ ສໍາລັບຄົນຕ່າງຊາດທີ່ອາໄສຢຸ່ກັບພວກເຈົ້າ, ເປັນກົດເກນຖາວອນຕະຫລອດຊົ່ວອາຍຸຄົນ.
ຂອງພວກເຈົ້າ, ດັ່ງນັ້ນ ຄົນເດີນທາງທີ່ພັກອາໃສຢຸ່ກັບພວກເຈົ້າກໍຕ້ອງເຮັດເຫມືອນຢ່າງທີ່ພວກເຈົ້າເຮັດດ້ວຍ.
ເຂົາຕ້ອງເຮັດເຫມືອນຢ່າງທີ່ພວກເຈົ້າເຮັດຕໍ່ຫນ້າພຣະຢາເວ. 16ກົດເກນແລະຂໍ້ບັງຄັບດຽວກັນຕ້ອງໃຊ້ກັບພວກເຈົ້າ
ແລະກັບຄົນຕ່າງຊາດທີ່ພັກອາໃສຢູ່ກັບພວກເຈົ້າ.'"
17ພຣະຢາເວໄດ້ບອກກັບໂມເຊອີກຄັ້ງ. ພຣະອົງກ່າວວ່າ, 18" ຈົ່ງເວົ້າກັບຄົນອິດສະຣາເອນແລະບອກພວກເຂົາວ່າ,'
ເມື່ອພວກເຈົ້າເຂົ້າມາໃນແຜ່ນດິນທີ່ເຮົາໄດ້ພາພວກເຈົ້າມາ, 19ເມື່ອພວກເຈົ້າກິນອາຫານທີ່ເປັນຜົນມາຈາກແຜ່ນດິນນັ້ນ,
ເຈົ້າຕ້ອງຖວາຍເຄື່ອງບູຊາແລະຖວາຍສິ່ງນັ້ນໃຫ້ກັບເຮົາ.
20ພວກເຈົ້າຕ້ອງຖວາຍເຂົ້າຈີ່ກ້ອນທໍາອິດ ຈາກກ້ອນແປ້ງທີ່ປະສົມແລ້ວຂອງພວກເຈົ້າ ແລະ ຖວາຍເປັນເຄື່ອງບູຊາຈາກລານຟາດເຂົ້າ.
ພວກເຈົ້າຕ້ອງຖວາຍເຂົ້າຫນົມນັ້ນດ້ວຍວິທີນີ້. 21ພວກເຈົ້າຕ້ອງຖວາຍເຄື່ອງບູຊາ ຖວາຍຈາກເຂົ້າຈີ່ກ້ອນທໍາອິດ
ຈາກແປ້ງທີ່ປະສົມແລ້ວຂອງພວກເຈົ້າໃຫ້ກັບເຮົາຕະຫລອດທຸກຊົ່ວອາຍຸຄົນຂອງພວກເຈົ້າ ບາງຄັ້ງ.
22ພວກເຈົ້າຈະເຮັດບາບໂດຍບໍ່ໄດ້ເຈດຕະນາທີ່ຈະເຮັດເຊັ່ນນີ້,
ຕອນທີ່ພວກເຈົ້າບໍ່ເຊື່ອຟັງຄໍາສັ່ງທຸກປະການທີ່ເຮົາໄດ້ສັ່ງກັບໂມເຊ 23ທຸກສິ່ງທີ່ເຮົາໄດ້ສັ່ງພວກເຈົ້າຜ່ານທາງໂມເຊ
ຕັ້ງແຕ່ວັນທີ່ເຮົາເລີ່ມໃຫ້ຄໍາສັ່ງແກ່ພວກເຈົ້າ ແລະ ຕໍ່ໄປຂ້າງຫນ້າຕະຫລອດຊົ່ວອາຍຸຄົນຂອງພວກເຈົ້າ.
24ໃນກໍລະນີຂອງການເຮັດບາບໂດຍບໍ່ໄດ້ເຈດຕະນາທີ່ຊຸມຊົນບໍ່ຮູ້ຕົວ, ກໍໃຫ້ຊຸມຊົນທັງຫມົດຖວາຍງົວຫນຸ່ມຫນຶ່ງໂຕເປັນເຄື່ອງເຜົາບູຊາ
ເພື່ອໃຫ້ມີກິ່ນຫອມແດ່ພຣະຢາເວ. ພວກເຈົ້າຕ້ອງເຮັດເຄື່ອງຖວາຍພືດຜົນບູຊາແລະເຄື່ອງດື່ມບູຊາ,
ພ້ອມກັບການຖວາຍນີ້ຕາມທີ່ກົດຂໍ້ບັງຄັບໄດ້ສັ່ງໄວ້, ແລະແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາລົບລ້າງບາບ.
25ປະໂຣຫິດຕ້ອງເຮັດການລົບລ້າງບາບໃຫ້ກັບຊຸມຊົນຂອງຄົນອິດສະຣາເອນທັງຫມົດ. ພວກເຂົາຈະໄດ້ຮັບການອະໄພ
ເພາະການເຮັດບາບນັ້ນເປັນຄວາມຜິດພາດ. ພວກເຂົາໄດ້ນໍາເຄື່ອງບູຊາຂອງພວກເຂົາມາ, ຖວາຍໃຫ້ ເຮົາ ເປັນເຄື່ອງບູຊາທີ່ເຜົາດ້ວຍໄຟ.
ພວກເຂົານໍາເຄື່ອງບູຊາລົບລ້າງບາບຂອງພວກເຂົາມາຢຸ່ຕໍ່ຫນ້າເຮົາ ສໍາລັບຄວາມຜິດພາດຂອງເຂົາ.
26ແລ້ວຊຸມຊົນອິດສະຣາເອນທັງຫມົດກໍຈະໄດ້ຮັບການອະໄພ, ແລະລວມທັງຄົນຕ່າງຊາດທີ່ອາໄສຢູ່ກັບພວກເຂົາດ້ວຍ,
ເພາະປະຊາຊົນທັງຫມົດໄດ້ເຮັດບາບໂດຍບໍ່ເຈດຕະນາ.
27ເຂົາຕ້ອງຖວາຍແບ້ໂຕແມ່ອາຍຸຫນຶ່ງປີເປັນເຄື່ອງບູຊາລົບລ້າງຄວາມບາບ. 28ປະໂຣຫິດຕ້ອງເຮັດການລົບລ້າງຄວາມບາບ
ໃຫ້ກັບຄົນທີ່ເຮັດບາບໂດຍບໍ່ເຈດຕະນາຕໍ່ຫນ້າພຣະຢາເວ ຄົນນັ້ນຈະໄດ້ຮັບການອະໄພ. ເມື່ອໄດ້ມີການລົບລ້າງບາບແລ້ວ.
29ພວກເຈົ້າຕ້ອງມີກົດເກນດຽວກັນສໍາລັບຄົນທີ່ເຮັດສິ່ງໃດໂດຍບໍ່ເຈດຕະນາ,
ກົດເກນດຽວກັນສໍາລັບຄົນທີ່ຢູ່ທ່າມກາງຄົນອິດສະຣາເອນໂດຍກໍາເນີດ ແລະ ສໍາລັບຄົນຕ່າງຊາດທີ່ພັກອາໄສຢູ່ທ່າມກາງພວກເຂົາ.
30ແຕ່ຄົນທີ່ເຮັດສິ່ງໃດທີ່ເປັນການລະເມີດ, ບໍ່ວ່າຈະເປັນຄົນອິດສະຣາເອນໂດຍກໍາເນີດຫລືຄົນຕ່າງຊາດ, ກໍເປັນການຫມິ່ນປະຫມາດເຮົາ.
ຄົນນັ້ນຕ້ອງຖືກຕັດອອກຈາກຊຸມຊົນຂອງເຂົາ. 31ເພາະເຂົາໄດ້ຫມິ່ນປະຫມາດຄໍາຂອງເຮົາແລະລະເມີດຄໍາສັ່ງຂອງເຮົາ,
ຄົນນັ້ນຕ້ອງຖືກຕັດອອກຢ່າງສິ້ນເຊີງ. ບາບຂອງເຂົາກໍຈະຢູ່ທີ່ຕົວເຂົາ.'"
32ຂະນະທີ່ຄົນອິດສະຣາເອນຢູ່ໃນຖິ່ນທຸລະກັນດານ, ພວກເຂົາໄດ້ພົບກັບຄົນຫນຶ່ງທີ່ອອກໄປເອົາຟືນໃນວັນສະບາໂຕ.
33ຄົນເຫລົ່ານັ້ນທີ່ພົບເຂົາຈຶ່ງພາເຂົາມາຫາໂມເຊ, ອາໂຣນ, ແລະຊຸມຊົນທັງຫມົດ.
34ພວກເຂົາກັກຊາຍຄົນນັ້ນໄວ້ໃນທີ່ຄຸມຂັງເພາະບໍ່ເຄີຍມີການປະກາດໄວ້ວ່າຈະເຮັດຢ່າງໃດກັບເຂົາ.


generated on Tue Jun 17 19:01:42 2025

35 ແລ້ວພຣະຢາເວກໍໄດ້ບອກກັບໂມເຊວ່າ, "ຊາຍຄົນນັ້ນຕ້ອງຖືກລົງໂທດເຖິງຕາຍຢ່າງແນ່ນອນ.
ຊຸມຊົນທັງຫມົດຕ້ອງເອົາກ້ອນຫີນດຶກໃສ່ເຂົາທີ່ນອກຄ້າຍ." 36 ດັ່ງນັ້ນຊຸມຊົນທັງຫມົດກໍນໍາເຂົາອອກໄປນອກຄ້າຍ
ແລະເອົາກ້ອນຫີນດຶກໃສ່ເຂົາຈົນຕາຍ ຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ.
37 ພຣະຢາເວໄດ້ບອກກັບໂມເຊອີກຄັ້ງ. ພຣະອົງບອກວ່າ, 38 ຈົ່ງເວົ້າກັບເຊື້ອສາຍຂອງອິດສະຣາເອນ
ແລະສັ່ງພວກເຂົາໃຫ້ເຮັດຍອຍຫ້ອຍໃສ່ແຈເສື້ອຂອງພວກເຂົາ, ຈົ່ງຫ້ອຍຍອຍເຫລົ່ານັ້ນແຕ່ລະແຈດ້ວຍດ້າຍສີຟ້າ.
ພວກເຂົາຕ້ອງເຮັດເຊັ່ນນີ້ຕະຫລອດທຸກຊົ່ວອາຍຸຄົນຂອງພວກເຂົາ. 39 ການເຮັດເຊັ່ນນີ້ຈະເປັນການເຕືອນໃຈພວກເຈົ້າ,
ໂດຍສະເພາະເມື່ອພວກເຈົ້າແນມເບິ່ງຍອຍນັ້ນ, ພວກເຈົ້າຈະເຮັດຕາມຄໍາສັ່ງຂອງເຮົາທຸກປະການ,
ເພື່ອທີ່ພວກເຈົ້າຈະບໍ່ແນມເບິ່ງຕາມໃຈແລະຕາຂອງພວກເຈົ້າເອງແລະເຮັດໃຫ້ພວກເຈົ້າເອງຫລິ້ນຊູ້ກັບພວກເຂົາ.
40 ການເຮັດເຊັ່ນນີ້ເພື່ອພວກເຈົ້າລະນຶກເຖິງແລະເຊື່ອຟັງຄໍາສັ່ງຂອງເຮົາ, ແລະເພື່ອພວກເຈົ້າຈະບໍຣິສຸດ, ທີ່ໄດ້ສະຫງວນໄວ້ສໍາລັບເຮົາ,
ພຣະເຈົ້າຂອງພວກເຈົ້າ. 41 ເຮົາຄືພຣະຢາເວ ພຣະເຈົ້າຂອງພວກເຈົ້າ, ຜູ້ນໍາພວກເຈົ້າອອກມາຈາກແຜ່ນດິນເອຢິບ,
ເພື່ອເປັນພຣະເຈົ້າຂອງພວກເຈົ້າ. ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ."


generated on Tue Jun 17 19:01:42 2025

# 16

[1]ໃນຕອນນັ້ນໂຄຣາລູກຊາຍຂອງອີຊະຮາ ຜູ້ເປັນບຸດຊາຍຂອງໂກຮາດ ຜູ້ເປັນລູກຊາຍຂອງເລວີ,
ພ້ອມກັບດາທານແລະອາບີຣາມລູກຊາຍຂອງເອລີອາບ, ແລະໂອນລູກຊາຍຂອງເປເລັດ, ຜູ້ເປັນເຊື້ອສາຍຂອງລູເບັນ,
ໄດ້ລວບລວມຄົນຈຳນວນຫນຶ່ງ.[2]ພວກເຂົາລຸກຂຶ້ນຕໍ່ຕ້ານໂມເຊ, ພ້ອມກັບຄົນອື່ນໆຈາກຄົນອິດສະຣາເອນ,
ທີ່ເປັນຜູ້ນຳຂອງຊຸມຊົນຈຳນວນສອງຮ້ອຍຫ້າສິບຄົນທີ່ເປັນຄົນມີຊື່ສຽງໃນຊຸມຊົນ.[3]ພວກເຂົາມາຊຸມນຸມກັນເພື່ອທີ່ຈະພົບໂມເຊແລະອາໂຣນ.
ພວກເຂົາກ່າວກັບທ່ານທັງສອງວ່າ, "ທ່ານເຮັດເກີນໄປແລ້ວ! ຊຸມຊົນທັງຫມົດນີ້ໄດ້ຖືກແຍກໄວ້, ພວກເຮົາທຸກຄົນ,
ແລະພຣະຢາເວກໍສະຖິດຢູ່ທ່າມກາງພວກເຮົາ. ເປັນຫຍັງທ່ານຈຶ່ງຍົກຕົວເອງຂຶ້ນເຫນືອຄົນທີ່ເຫລືອຂອງຊຸມຊົນຂອງພຣະຢາເວ?"

[4]ເມື່ອໂມເຊໄດ້ຍິນດັ່ງນັ້ນ, ເພິ່ນກໍຫມູບຫນ້າລົງ.[5]ເພິ່ນຈຶ່ງເວົ້າກັບໂຄຣາແລະຄົນເຫລົ່ານັ້ນທີ່ມາກັບເຂົາທຸກຄົນ,"
ໃນຕອນເຊົ້າພຣະຢາເວຈະຊົງເຮັດໃຫ້ຮູ້ກັນວ່າ ໃຜເປັນຂອງພຣະອົງ ແລະໃຜທີ່ໄດ້ຮັບການແຍກໄວ້ແດ່ພຣະອົງ.
ພຣະອົງຈະຊົງນຳຄົນນັ້ນມາໃກ້ພຣະອົງ. ຄົນທີ່ພຣະອົງຊົງເລືອກ ພຣະອົງຈະຊົງນຳມາໃກ້ພຣະອົງທີ່ແທ່ນບູຊາ.
[6]ຈົ່ງເຮັດດັ່ງນີ້, ໂຄຣາແລະພັກພວກຂອງເຈົ້າຈົ່ງນຳກະຖາງໄຟມາ.
[7]ໃນມື້ອື່ນເຊົ້ານີ້ແລະໃສ່ໄຟແລະເຄື່ອງຫອມລົງໄປໃນກະຖາງໄຟເຫລົ່ານັ້ນຕໍ່ພຣະພັກພຣະຢາເວ. ຜູ້ໃດທີ່ພຣະຢາເວຊົງເລືອກ,
ຄົນນັ້ນຈະຖືກແຍກໄວ້ແດ່ພຣະຢາເວ. ເຈົ້າເຮັດເກີນໄປແລ້ວ, ເຈົ້າທີ່ເປັນເຊື້ອສາຍຂອງເລວີ."
[8]ໂມເຊ, ໄດ້ເວົ້າກັບໂຄລາອີກວ່າ," ບັດນີ້, ເຈົ້າທີ່ເປັນເຊື້ອສາຍຄົນເລວີຈົ່ງຟັງ:[9]ການທີ່ພຣະເຈົ້າແຫ່ງອິດສະຣາເອນຊົງແຍກເຈົ້າໄວ້
ຈາກຊຸມຊົນອິດສະຣາເອນ, ເພື່ອນຳພວກເຈົ້າມາໃກ້ພຣະອົງ, ເພື່ອໃຫ້ເຮັດວຽກໃນຫໍເຕັນສັກສິດຂອງພຣະຢາເວ,
ແລະຢືນຢູ່ຕໍ່ຫນ້າຊຸມຊົນນີ້ເພື່ອຮັບໃຊ້ພວກເຂົາ ນັ້ນເປັນສິ່ງເລັກນ້ອຍສຳລັບທ່ານບໍ?[10]ພຣະອົງຊົງນຳເຈົ້າມາໃກ້,
ແລະລວມທັງຍາດຕິພີ່ນ້ອງຂອງເຈົ້າທຸກຄົນ, ທີ່ເປັນເຊື້ອສາຍຂອງເລວີ, ທີ່ຢູ່ກັບເຈົ້າ, ແຕ່ເຈົ້າກຳລັງສະແຫວງຫາຕຳແຫນ່ງປະໂຣຫິດອີກ!
[11]ນັ້ນເປັນເຫດໃຫ້ເຈົ້າແລະພັກພວກຂອງເຈົ້າມາຊຸມນຸມກັນຕໍ່ຕ້ານພຣະຢາເວ. ດັ່ງນັ້ນເປັນຫຍັງເຈົ້າຈຶ່ງຈົ່ມວ່າກ່ຽວກັບອາໂຣນ,
ຜູ້ທີ່ເຊື່ອຟັງພຣະຢາເວ?"
[12]ແລ້ວໂມເຊກໍເອີ້ນດາທານແລະອາບີຣາມ, ລູກຊາຍຂອງເອລີອາບ, ແຕ່ພວກເຂົາບອກວ່າ, "ເຮົາຈະບໍ່ຂຶ້ນມາ.
[13]ການທີ່ທ່ານພາເຮົາອອກມາຈາກແຜ່ນດິນທີ່ອຸດົມດ້ວຍນໍ້ານົມແລະນໍ້າເຜິ້ງ,
ເພື່ອທີ່ຈະຂ້າເຮົາໃນຖິ່ນທຸລະກັນດານເປັນສິ່ງເລັກນ້ອຍສຳລັບທ່ານບໍ? ບັດນີ້ທ່ານຕ້ອງການຈະເຮັດໃຫ້ຕົວທ່ານເອງເປັນຜູ້ປົກຄອງເຫນືອເຮົາ.
[14]ຍິ່ງກວ່ານັ້ນ, ທ່ານຍັງບໍ່ພາເຮົາເຂົ້າໄປໃນແຜ່ນດິນທີ່ອຸດົມສົມບູນດ້ວຍນໍ້ານົມແລະນໍ້າເຜິ້ງ, ຫລືບໍ່ໄດ້ມອບທົ່ງນາແລະສວນອະງຸ່ນໃຫ້ແກ່ເຮົາ.
ບັດນີ້ທ່ານຈະເຮັດໃຫ້ເຮົາຕາບອດດ້ວຍຄຳສັນຍາທີ່ວ່າງເປົ່າບໍ? ເຮົາຈະບໍ່ມາຫາທ່ານ."
[15]ຂໍຢ່າຊົງຮັບເຄື່ອງບູຊາຈາກພວກເຂົາ. ຂ້ານ້ອຍບໍ່ໄດ້ເອົາລໍຂອງພວກເຂົາມາແມ່ນແຕ່ໂຕດຽວ,
ແລະຂ້ານ້ອຍກໍບໍ່ເຄີຍທຳຮ້າຍໃຜໃນພວກເຂົາເລີຍ."[16]ແລ້ວໂມເຊກໍເວົ້າກັບໂຄຣາວ່າ,"
ມື້ອື່ນນີ້ເຈົ້າແລະພັກພວກຂອງເຈົ້າທັງຫມົດຕ້ອງໄປຢູ່ຕໍ່ພຣະພັກພຣະຢາເວ ທັງເຈົ້າແລະພວກເຂົາ, ແລະອາໂຣນ.
[17]ພວກເຈົ້າແຕ່ລະຄົນຕ້ອງນຳກະຖາງໄຟມາແລະໃສ່ເຄື່ອງຫອມລົງໄປໃນນັ້ນ.
ແລ້ວແຕ່ລະຄົນກໍຕ້ອງນຳກະຖາງໄຟຂອງຕົນມາຢູ່ຕໍ່ພຣະພັກພຣະຢາເວ, ກະຖາງໄຟສອງຮ້ອຍຫ້າສິບຫນ່ວຍ. ທັງເຈົ້າແລະອາໂຣນ,
ກໍຕ້ອງເອົາກະຖາງໄຟຂອງພວກເຈົ້າມາດ້ວຍ."
[18]ດັ່ງນັ້ນຊາຍທຸກຄົນກໍໄດ້ເອົາກະຖາງໄຟຂອງຕົນໄປ, ໃສ່ໄຟລົງໄປໃນນັ້ນ, ແລະວາງເຄື່ອງຫອມໃນກະຖາງໄຟນັ້ນ,
ແລະຢືນຢູ່ທີ່ທາງເຂົ້າເຕັນປະຊຸມກັບໂມເຊແລະອາໂຣນ.[19]ໂຄຣາໄດ້ປະຊຸມຊຸມຊົນທັງຫມົດໃຫ້ຕໍ່ຕ້ານໂມເຊແລະອາໂຣນ
ທີ່ທາງເຂົ້າຫໍເຕັນປະຊຸມ, ແລະພຣະສະຫງ່າຣາສີຂອງພຣະຢາເວກໍປົກຄຸມຊຸມຊົນທັງຫມົດ.
[20]ແລ້ວພຣະຢາເວໄດ້ບອກກັບໂມເຊແລະອາໂຣນວ່າ:[21]ຈົ່ງແຍກຕົວອອກຈາກຊຸມຊົນນີ້
ທີ່ເຮົາຈະທຳລາຍພວກເຂົາໃຫ້ຫມົດສິ້ນເສຍດຽວນີ້."[22]ໂມເຊແລະອາໂຣນຫມູບຫນ້າລົງ ແລະ ທູນວ່າ," ຂ້າແດ່ພຣະເຈົ້າ,
ຜູ້ຊົງເປັນພຣະເຈົ້າແຫ່ງວິນຍານຂອງມວນມະນຸດ, ຖ້າຫາກຄົນຫນຶ່ງເຮັດບາບ, ພຣະອົງຈະຊົງໂກດຮ້າຍຕໍ່ຊຸມຊົນທັງຫມົດບໍ?"
[23]ພຣະຢາເວຊົງຕອບໂມເຊ. ພຣະອົງກ່າວວ່າ,[24]ຈົ່ງບອກກັບຊຸມຊົນນີ້ວ່າ. ຈົ່ງອອກໄປ,' ຈົ່ງອອກໄປໃຫ້ໄກຈາກເຕັນຂອງໂຄຣາ, ດາທານ,
ແລະອາບີຣາມ.'"
[25]ແລ້ວໂມເຊກໍລຸກຂຶ້ນແລະໄປຫາດາທານແລະອາບີຣາມ; ພວກອາວຸໂສຂອງອິດສະຣາເອນກໍຕາມເພິ່ນໄປ.[26]ເພິ່ນບອກກັບປະຊາຊົນວ່າ,"
ຈົ່ງອອກໄປຈາກເຕັນຂອງຄົນຊົ່ວຮ້າຍເຫລົ່ານີ້ດຽວນີ້ແລະຢ່າແຕະຕ້ອງສິ່ງໃດຂອງພວກເຂົາ,
ບໍ່ດັ່ງນັ້ນພວກເຈົ້າຈະຖືກທຳລາຍຫມົດສິ້ນເນື່ອງຈາກບາບທັງຫມົດຂອງພວກເຂົາ."[27]ດັ່ງນັ້ນປະຊາຊົນທີ່ຢູ່ທຸກດ້ານຂອງເຕັນຂອງໂຄຣາ, ດາທານ,
ແລະອາບີຣາມກໍອອກມາແລະຢືນຢູ່ທີ່ປະຕູເຕັນຂອງພວກເຂົາ, ພ້ອມກັບເມຍ, ລູກຊາຍ, ແລະລູກນ້ອຍໆຂອງພວກເຂົາ.
[28]ແລ້ວໂມເຊຈຶ່ງກ່າວວ່າ," ໂດຍການເຮັດເຊັ່ນນີ້ພວກເຈົ້າຈະໄດ້ຮູ້ວ່າ ພຣະຢາເວໄດ້ສົ່ງເຮົາມາເພື່ອທີ່ຈະເຮັດງານເຫລົ່ານີ້ທັງຫມົດ,
ເພາະເຮົາບໍ່ໄດ້ເຮັດສິ່ງເຫລົ່ານີ້ຕາມໃຈຂອງເຮົາ.[29]ຖ້າຄົນເຫລົ່ານີ້ຕາຍດ້ວຍການຕາຍທຳມະຊາດທີ່ເກີດຂຶ້ນ ເປັນປົກກະຕິທົ່ວໄປ,
ແລ້ວພຣະຢາເວກໍບໍ່ໄດ້ຊົງໃຊ້ເຮົາມາ.[30]ແຕ່ພຣະຢາເວຊົງເຮັດໃຫ້ພື້ນດິນອ້າອອກແລະກືນພວກເຂົາ,
ພ້ອມກັບຄອບຄົວຂອງພວກເຂົາເຂົ້າໄປເຫມືອນກັບປາກຂະຫນາດໃຫຍ່, ແລະຖ້າພວກເຂົາລົງໄປສູ່ແດນຄົນຕາຍທັງເປັນ,
ແລ້ວພວກເຈົ້າກໍຕ້ອງເຂົ້າໃຈວ່າຄົນເຫລົ່ານັ້ນໄດ້ຫມິ່ນປະຫມາດພຣະຢາເວ."
[31]ທັນທີ ທີ່ໂມເຊເວົ້າຖ້ອຍຄຳທັງຫມົດນີ້ຈົບ, ພື້ນດິນທີ່ຢູ່ໃຕ້ຄົນເຫລົ່ານັ້ນກໍຍະອອກ.[32]ແຜ່ນດິນກໍຍະອອກແລະກືນພວກເຂົາ, ຄອບຄົວພວກເຂົາ,
ແລະທຸກຄົນທີ່ມີສ່ວນຮ່ວມກັບໂຄຣາ, ລວມທັງຊັບສິນທັງຫມົດຂອງພວກເຂົາດ້ວຍ.
[33]ພວກເຂົາແລະທຸກຄົນໃນຄອບຄົວຂອງພວກເຂົາກໍລົງໄປສູ່ແດນຄົນຕາຍທັງເປັນ. ແຜ່ນດິນກໍປົກປິດພວກເຂົາໄວ້,
ແລະໃນເຫດການນີ້ພວກເຂົາກໍດັບສູນໄປຈາກທ່າມກາງຊຸມຊົນນີ້.[34]ຄົນອິດສະຣາເອນທັງຫມົດທີ່ຢູ່ອ້ອມໆ


generated on Tue Jun 17 19:01:42 2025

ພວກເຂົາກໍແລ່ນຫນີຈາກສຽງຮ້ອງຂອງພວກເຂົາ. ພວກເຂົາຮ້ອງຂຶ້ນວ່າ, "ແຜ່ນດິນນີ້ຈະກືນພວກເຮົາເຂົ້າໄປດ້ວຍ!"[35]ແລ້ວໄຟຈາກພຣະຢາເວ
ກໍລົງມາເຜົາຜານຄົນ250ຄົນທີ່ຖວາຍເຄື່ອງຫອມນັ້ນ.
[36]ພຣະຢາເວໄດ້ບອກກັບໂມເຊອີກວ່າ,[37]ຈົ່ງບອກເອເລອາຊາລູກຊາຍຂອງອາໂລນປະໂຣຫິດ
ແລະໃຫ້ເຂົາເອົາກະຖາງໄຟອອກມາຈາກກອງໄຟນັ້ນ, ເພາະກະຖາງໄຟນັ້ນໄດ້ຖືກແຍກໄວ້ສະເພາະເຮົາ.
ແລ້ວໃຫ້ເຂົາກະຈາຍຖ່ານທີ່ລຸກຢູ່ນັ້ນອອກໄປໄກໆ.[38]ຈົ່ງເອົາກະຖາງໄຟຂອງຄົນເຫລົ່ານັ້ນທີ່ຖືກຂ້າຕາຍເພາະບາບຂອງພວກເຂົາມາ.
ໃຫ້ພວກເຂົາເຮັດໃຫ້ເປັນແຜ່ນບາງໆທີ່ຕີດ້ວຍຄ້ອນສໍາລັບປົກແທ່ນບູຊາ ຄົນເຫລົ່ານັ້ນກໍເຮັດເພື່ອຖວາຍກະຖາງໄຟເຫລົ່ານັ້ນຕໍ່ຫນ້າເຮົາ,
ດັ່ງນັ້ນກະຖາງໄຟເຫລົ່ານັ້ນກໍຖືກແຍກໄວ້ສະເພາະເຮົາ.
ກະຖາງໄຟເຫລົ່ານັ້ນຈະເປັນຫມາຍສໍາຄັນຂອງການຊົງສະຖິດຂອງເຮົາຕໍ່ຄົນອິດສະຣາເອນ."
[39]ເອເລອາຊາປະໂຣຫິດກໍເອົາກະຖາງໄຟທອງສໍາລິດທີ່ຖືກໄຟເຜົາເຫລົ່ານັ້ນໃຊ້, ແລະກະຖາງເຫລົ່ານັ້ນກໍຖືກຕີໃຫ້ເປັນແຜ່ນບາງໆປົກແທ່ນບູຊາ,
[40]ເພື່ອເປັນການເຕືອນໃຈຄົນອິດສະຣາເອນ, ເພື່ອທີ່ຈະບໍ່ມີຄົນພາຍນອກຄົນໃດທີ່ບໍ່ໄດ້ເປັນເຊື້ອສາຍຈາກອາໂຣນ ຈະເຂົ້າມາເຜົາເຄື່ອງຫອມ
ຕໍ່ພຣະພັກພຣະຢາເວ, ເພື່ອພວກເຂົາຈະບໍ່ເປັນເຫມືອນກັບໂຄຣາແລະພັກພວກຂອງເຂົາ ຕາມທີ່ພຣະຢາເວໄດ້ຊົງສັ່ງໄວ້ຜ່ານໂມເຊ.
[41]ແຕ່ວັນຕໍ່ມາຊຸມຊົນທັງຫມົດຂອງຄົນອິດສະຣາເອນ ກໍຈົ່ມວ່າໂມເຊ ແລະອາໂຣນ. ພວກເຂົາບອກວ່າ,"
ພວກເຈົ້າໄດ້ຂ້າຄົນຂອງພຣະຢາເວ,"[42]ແລ້ວເຫດການນີ້ກໍໄດ້ເກີດຂຶ້ນ, ເມື່ອຊຸມຊົນໄດ້ມາຊຸມນຸມກັນຕໍ່ຕ້ານໂມເຊກັບອາໂຣນ,
ຂະນະທີ່ພວກເຂົາຫັນຫນ້າໄປທາງຫໍເຕັນປະຊຸມແລະ, ເບິ່ງແມ, ເມກໄດ້ປົກຄຸມເຕັນນັ້ນ. ພຣະສະຫງ່າຣາສີຂອງພຣະຢາເວກໍປາກົດຂຶ້ນ,
[43]ແລະໂມເຊແລະອາໂຣນກໍມາທີ່ຂ້າງຫນ້າຫໍເຕັນປະຊຸມ.
[44]ແລ້ວພຣະຢາເວບອກໂມເຊ. ພຣະອົງກ່າວວ່າ,[45]ຈົ່ງຖອຍອອກຫ່າງຈາກປະຊາຊົນເຫລົ່ານີ້
ເພື່ອທີ່ເຮົາຈະທໍາລາຍພວກເຂົາໃຫ້ຫມົດສິ້ນດຽວນີ້." ແລ້ວໂມເຊແລະອາໂຣນກໍຫມູບຫນ້າລົງເຖິງພື້ນດິນ.[46]ໂມເຊຈຶ່ງບອກກັບອາໂຣນວ່າ,"
ຈົ່ງໄປເອົາກະຖາງໄຟມາ, ແລ້ວໃສ່ໄຟທີ່ມາຈາກແທ່ນບູຊາລົງໄປ, ແລະໃສ່ເຄື່ອງຫອມລົງໄປໃນກະຖາງໄຟນັ້ນ,
ຈົ່ງຖືກະຖາງໄຟນັ້ນມາທີ່ຊຸມຊົນນີ້ໂດຍໄວ, ແລະເຮັດການລົບລ້າງບາບໃຫ້ກັບພວກເຂົາ, ເພາະຄວາມໂກດຮ້າຍໄດ້ລົງມາຈາກພຣະຢາເວ.
ໂລກລະບາດເກີດຂຶ້ນແລ້ວ."
[47]ດັ່ງນັ້ນອາໂຣນຈຶ່ງເຮັດຕາມທີ່ໂມເຊສັ່ງ. ເພິ່ນຈຶ່ງແລ່ນເຂົ້າໄປທາງກາງຂອງຊຸມຊົນນັ້ນ.
ໂລກລະບາດເລີ່ມແຜ່ຂະຫຍາຍອອກໄປຫລາຍແລ້ວທ່າມກາງປະຊາຊົນ,
ດັ່ງນັ້ນເພິ່ນຈຶ່ງໃສ່ເຄື່ອງຫອມລົງເຮັດການລົບມົນທິນບາບໃຫ້ກັບປະຊາຊົນ.[48]ອາໂຣນກໍຢືນຢູ່ລະຫວ່າງຄົນຕາຍກັບຄົນທີ່ມີຊີວິດ;
ໃນການເຮັດເຊັ່ນນີ້ ໂລກລະບາດກໍໄດ້ຢຸດລົງ.
[49]ຄົນເຫລົ່ານັ້ນທີ່ຕາຍຈາກໂລກລະບາດ ມີຈໍານວນ 14,700 ຄົນ, ນອກເຫນືອຈາກຄົນເຫລົ່ານັ້ນທີ່ໄດ້ຕາຍໄປໃນເລື່ອງຂອງໂຄຣາ.
[50]ອາໂຣນໄດ້ກັບມາຫາໂມເຊ ທີ່ທາງເຂົ້າຫໍເຕັນປະຊຸມ, ແລະໂລກລະບາດກໍສິ້ນສຸດລົງ.

17 [1]ພຣະຢາເວໄດ້ກ່າວກັບໂມເຊ. ພຣະອົງກ່າວວ່າ,[2]ຈົ່ງເວົ້າກັບຄົນອິດສະຣາເອນແລະເອົາໄມ້ເທົ້າຈາກພວກເຂົາມາ,
ໄມ້ເທົ້າອັນຫນຶ່ງຈາກແຕ່ລະບັນພະບູລຸດແຕ່ລະເຜົ່າ, ຈຳນວນສິບສອງອັນ. ຈົ່ງຂຽນຊື່ແຕ່ລະຄົນເທິງໄມ້ເທົ້າຂອງເຂົາ.

[3]ເຈົ້າຕ້ອງຂຽນຊື່ ອາໂຣນ ເທິງໄມ້ເທົ້າຂອງເຜົ່າເລວີ. ຕ້ອງມີໄມ້ເທົ້າອັນຫນຶ່ງສຳລັບຜູ້ນຳແຕ່ລະຄົນຈາກເຜົ່າບັນພະບູລຸດຂອງເຂົາ.
[4]ເຈົ້າຕ້ອງວາງໄມ້ເທົ້າເຫລົ່ານັ້ນໄວ້ໃນເຕັນປະຊຸມ ໃນຕໍ່ຫນ້າຫີບພັນທະສັນຍາພຣະບັນຊາ, ຊຶ່ງເປັນບ່ອນທີ່ເຮົາໄດ້ພົບກັບເຈົ້າ.
[5]ສິ່ງທີ່ຈະເກີດຂຶ້ນກັບໄມ້ເທົ້າຂອງຄົນທີ່ເຮົາເລືອກກໍຈະແຕກຫນໍ່. ເຮົາຈະເຮັດໃຫ້ຄຳຈົ່ມຈາກຄົນອິດສະຣາເອນ, ທີ່ເຂົາເວົ້າຕໍ່ຕ້ານເຈົ້າຢຸດໄປ."
[6]ດັ່ງນັ້ນໂມເຊຈຶ່ງບອກກັບຄົນອິດສະຣາເອນ. ຜູ້ນຳເຜົ່າທຸກຄົນກໍນຳໄມ້ເທົ້າຂອງເຂົາມາໃຫ້ເພິ່ນ, ໄມ້ເທົ້າອັນຫນຶ່ງຈາກຜູ້ນຳແຕ່ລະຄົນ
ທີ່ເລືອກມາແຕ່ລະເຜົ່າບັນພະບູລຸດ, ໄມ້ເທົ້າທັງຫມົດມີສິບສອງອັນ. ໄມ້ເທົ້າຂອງອາໂຣນກໍຢູ່ທ່າມກາງໄມ້ເທົ້າເຫລົ່ານັ້ນ.
[7]ແລ້ວໂມເຊກໍວາງໄມ້ເທົ້າເຫລົ່ານັ້ນຕໍ່ພຣະພັກພຣະຢາເວໃນເຕັນແຫ່ງຫີບພັນທະສັນຍາພຣະບັນຊາ.
[8]ວັນຕໍ່ມາ ໂມເຊໄດ້ໄປທີ່ເຕັນແຫ່ງຫີບພັນທະສັນຍາພຣະບັນຊາ ແລະ, ເບິ່ງເຖີດໄມ້ເທົ້າ, ຂອງອາໂຣນທີ່ເປັນຄົນເຜົ່າເລວີກໍແຕກຫນໍ່.
ໄມ້ເທົ້ານັ້ນແຕກຫນໍ່ແລະອອກດອກ ແລະເກີດຫມາກອາວມອນສຸກ![9]ໂມເຊຈຶ່ງເອົາໄມ້ເທົ້າທັງຫມົດອອກໄປຈາກພຣະພັກພຣະຢາເວ
ມາຍັງຄົນອິດສະຣາເອນທັງຫມົດ, ແລະແຕ່ລະຄົນກໍເອົາໄມ້ເທົ້າຂອງເຂົາໄປ.
[10]ພຣະຢາເວໄດ້ກ່າວກັບໂມເຊວ່າ," ຈົ່ງວາງໄມ້ເທົ້າຂອງອາໂຣນໄວ້ຕໍ່ຫນ້າຫີບພັນທະສັນຍາພຣະບັນຊາ.
ຈົ່ງເກັບໄມ້ເທົ້ານັ້ນໄວ້ເປັນເຄື່ອງຫມາຍຕໍ່ຄົນທີ່ກະບົດ ເພື່ອທີ່ເຈົ້າຈະເຮັດໃຫ້ຄຳຈົ່ມວ່າຕໍ່ເຮົາສິ້ນສຸດລົງ,
ບໍ່ດັ່ງນັ້ນພວກເຂົາຈະຕ້ອງຕາຍ."[11]ໂມເຊກໍເຮັດຕາມທີ່ພຣະຢາເວໄດ້ສັ່ງເພິ່ນ.
[12]ປະຊາຊົນອິດສະຣາເອນເວົ້າກັບໂມເຊແລະກ່າວວ່າ, "ເຮົາຈະຕາຍກັນທີ່ນີ້. ເຮົາຈະຈິບຫາຍກັນຫມົດ![13]ທຸກຄົນທີ່ຂຶ້ນມາ ຄົນທີ່ເຂົ້າມາໃກ້,
ຫໍເຕັນສັກສິດຂອງພຣະຢາເວ ຈະຕາຍເຮົາຕ້ອງ, ພວກເຮົາຈະບໍ່ຕາຍຫມົດບໍ?"


generated on Tue Jun 17 19:01:42 2025

18 [1]ພຣະຢາເວໄດ້ກ່າວກັບອາໂຣນວ່າ,"ເຈົ້າ, ກັບພວກລູກຊາຍຂອງເຈົ້າ,
ແລະເຊື້ອສາຍຂອງບັນພະບູລຸດຂອງເຈົ້າຈະຮັບຜິດຊອບຕໍ່ການເຮັດບາບທັງຫມົດທີ່ເຮັດຕໍ່ສະຖານນະມັດສະການ.
ແຕ່ສະເພາະເຈົ້າກັບພວກລູກຊາຍຂອງເຈົ້າເທົ່ານັ້ນທີ່ຮັບຜິດຊອບຕໍ່ການເຮັດບາບທັງຫມົດທີ່ເຮັດໂດຍຄົນທີ່ຢູ່ໃນຕໍາແຫນ່ງປະໂຣຫິດ.
[2]ສ່ວນພວກພີ່ນ້ອງຂອງເຜົ່າເລວີ, ເປັນເຜົ່າບັນພະບຸລຸດ, ຂອງເຈົ້າຈົ່ງພາພວກເຂົາມາກັບເຈົ້າ ເພື່ອໃຫ້ພວກເຂົາຮ່ວມກັນກັບເຈົ້າ ແລະຊ່ວຍເຈົ້າ
ເມື່ອເຈົ້າແລະພວກລູກຊາຍຂອງເຈົ້າ ເຮັດວຽກຢູ່ຂ້າງຫນ້າຫໍເຕັນຫີບພັນທະສັນຍາພຣະບັນຊາ.

[3]ເຖິງຢ່າງໃດກໍຕາມ, ພວກເຂົາຕ້ອງບໍ່ເຂົ້າມາໃກ້ສິ່ງໃດໃນສະຖານທີ່ບໍຣິສຸດ ຫລືສິ່ງທີ່ໃຊ້ກັບແທ່ນບູຊາ,
ບໍ່ດັ່ງນັ້ນພວກເຂົາແລະລວມທັງເຈົ້າດ້ວຍຈະຕາຍ.[4]ພວກເຂົາຕ້ອງຮ່ວມກັນກັບເຈົ້າແລະຮັບຜິດຊອບຫໍເຕັນປະຊຸມ,
ເພາະວຽກທັງຫມົດກ່ຽວກັບຫໍເຕັນນັ້ນ. ຄົນຕ່າງຊາດຕ້ອງບໍ່ເຂົ້າມາໃກ້ເຈົ້າ.[5]ເຈົ້າຕ້ອງຮັບຜິດຊອບສະຖານທີ່ບໍຣິສຸດແລະແທ່ນບູຊາ
ເພື່ອທີ່ຄວາມໂກດຮ້າຍຂອງເຮົາຈະບໍ່ລົງມາເຫນືອຄົນອິດສະຣາເອນອີກ.
[6]ເບິ່ງເຖີດ, ເຮົາເອງໄດ້ເລືອກພວກພີ່ນ້ອງຂອງເຈົ້າຈາກເຜົ່າເລວີທ່າມກາງເຊື້ອສາຍຂອງອິດສະຣາເອນ. ພວກເຂົາເປັນຂອງປະທານແກ່ເຈົ້າ,
ທີ່ໄດ້ມອບຖວາຍໃຫ້ເຮົາເຮັດວຽກກ່ຽວກັບຫໍເຕັນປະຊຸມ.
[7]ແຕ່ສະເພາະເຈົ້າແລະພວກລູກຊາຍຂອງເຈົ້າເທົ່ານັ້ນທີ່ຈະເຮັດຫນ້າທີ່ໃນຕໍາແຫນ່ງປະໂຣຫິດທີ່ກ່ຽວກັບທຸກສິ່ງທີ່ໃຊ້ກັບແທ່ນບູຊາ ແລະ
ທຸກສິ່ງທີ່ຢູ່ໃນຜ້າກັ້ງນັ້ນ. ເຈົ້າເອງກໍຕ້ອງຖືປະຕິບັດຕາມຄວາມຮັບຜິດຊອບເຫລົ່ານັ້ນ.
ເຮົາໄດ້ມອບຕໍາແຫນ່ງປະໂຣຫິດໃຫ້ກັບເຈົ້າເປັນຂອງປະທານ. ຄົນໃດທີ່ເປັນຄົນຕ່າງຊາດເຂົ້າມາໃກ້ ຈະຕ້ອງຖືກລົງໂທດເຖິງຕາຍ."
[8]ຕໍ່ມາພຣະຢາເວໄດ້ບອກກັບອາໂຣນວ່າ,"ເບິ່ງເຖີດ, ເຮົາໄດ້ມອບຫນ້າທີ່ໃຫ້ພວກເຈົ້າ ຮັບຜິດຊອບເຄື່ອງບູຊາທີ່ຖວາຍຕໍ່ເຮົາ,
ແລະສິ່ງບໍຣິສຸດທຸກຢ່າງທີ່ຄົນອິດສະຣາເອນຖວາຍຕໍ່ເຮົາ.
ເຮົາໄດ້ໃຫ້ເຄື່ອງບູຊາເຫລົ່ານີ້ແກ່ເຈົ້າແລະພວກລູກຊາຍຂອງເຈົ້າເພື່ອເປັນສ່ວນຂອງພວກເຈົ້າຕະຫລອດໄປ.[9]ສິ່ງເຫລົ່ານີ້ເປັນສິ່ງບໍຣິສຸດທີ່ສຸດ,
ທີ່ບໍ່ໄດ້ເຜົາໄຟຈາກເຄື່ອງບູຊາທຸກຢ່າງຂອງພວກເຂົາຄື ພືດຜົນບູຊາທຸກຢ່າງ, ເຄື່ອງບູຊາລົບລ້າງບາບທຸກຢ່າງ,
ແລະເຄື່ອງບູຊາຊົດໃຊ້ບາບທຸກຢ່າງ ສິ່ງເຫລົ່ານີ້ເປັນສິ່ງບໍຣິສຸດທີ່ສຸດສໍາລັບເຈົ້າ ແລະພວກລູກຊາຍຂອງເຈົ້າ.
[10]ເຄື່ອງບູຊາເຫລົ່ານີ້ບໍຣິສຸດຫລາຍ; ຜູ້ຊາຍທຸກຄົນຈົ່ງກິນສິ່ງນັ້ນ, ເພາະສິ່ງເຫລົ່ານີ້ບໍຣິສຸດສໍາລັບພວກເຈົ້າ.
[11]ເຫລົ່ານີ້ຄືເຄື່ອງບູຊາທີ່ຈະເປັນຂອງເຈົ້າ: ຄືຂອງຖວາຍຂອງພວກເຂົາ, ເຄື່ອງບູຊາຍົກຍໍຖວາຍທັງຫມົດຂອງຄົນອິດສະຣາເອນ.
ເຮົາໄດ້ມອບສິ່ງເຫລົ່ານັ້ນໃຫ້ແກ່ເຈົ້າ, ພວກລູກຊາຍແລະລູກສາວ, ຂອງເຈົ້າເພື່ອເປັນສ່ວນຂອງພວກເຈົ້າຕະຫລອດໄປ.
ທຸກຄົນໃນຄອບຄົວຂອງເຈົ້າທີ່ໄດ້ຮັບການຊໍາລະໃຫ້ສະອາດແລ້ວຈະກິນສິ່ງໃດໆ ຂອງເຄື່ອງບູຊາເຫລົ່ານີ້ໄດ້.
[12]ນໍ້າມັນຢ່າງດີທີ່ສຸດທັງຫມົດ, ເຫລົ້າອະງຸ່ນໃຫມ່ ແລະພືດຜົນເປັນເມັດ, ທີ່ດີທີ່ສຸດທັງຫມົດ ຜົນທໍາອິດທີ່ປະຊາຊົນໄດ້ຖວາຍຕໍ່ເຮົາ
ສິ່ງທັງຫມົດເຫລົ່ານີ້ ເຮົາໄດ້ມອບໃຫ້ແກ່ເຈົ້າ.[13]ຫມາກໄມ້ສຸກລຸ້ນທໍາອິດຂອງທຸກຕົ້ນທີ່ຢູ່ໃນທີ່ດິນຂອງພວກເຂົາ, ທີ່ພວກເຂົາໄດ້ນໍາມາຖວາຍເຮົາ,
ຈະເປັນຂອງເຈົ້າ. ທຸກຄົນໃນຄອບຄົວຂອງເຈົ້າທີ່ໄດ້ຮັບການຊໍາລະສະອາດແລ້ວ ກໍຈະກິນເຄື່ອງບູຊາເຫລົ່ານີ້ໄດ້.
[14]ສິ່ງທີ່ໄດ້ມອບຖວາຍທຸກສິ່ງໃນອິດສະຣາເອນຈະເປັນຂອງເຈົ້າ.[15]ທຸກສິ່ງທີ່ເກີດຄັ້ງທໍາອິດ,
ລູກຫົວປີທັງຫມົດທີ່ປະຊາຊົນໄດ້ຖວາຍແດ່ພຣະຢາເວ, ທັງຄົນແລະສັດ, ຈະເປັນຂອງເຈົ້າ. ນອກຈາກນັ້ນ,
ປະຊາຊົນຈະຕ້ອງຊື້ລູກຊາຍກົກທຸກຄົນກັບຄືນຢ່າງແນ່ນອນ, ແລະພວກເຂົາຕ້ອງຊື້ສັດໂຕຜູ້ທີ່ບໍ່ມີມົນທິນກັບຄືນໄປ.
[16]ປະຊາຊົນຈະນໍາລູກກົກເຫລົ່ານັ້ນກັບໄປດ້ວຍການຊື້ຄືນໄປຫລັງຈາກທີ່ມີອາຍຸໄດ້ຫນຶ່ງເດືອນ. ແລ້ວປະຊາຊົນຕ້ອງຊື້ກັບຄືນ,
ເປັນເງິນຫ້າຫລຽນ, ຕາມຫລຽນຂອງສໍານັກນະມັດສະການທີ່ມີຄ່າເທົ່າກັບຊາວເກຣາ.
[17]ແຕ່ລູກຫົວປີຂອງງົວ, ຫລືລູກຫົວປີຂອງແກະ, ຫລືລູກຫົວປີຂອງແບ້, ເຈົ້າຕ້ອງບໍ່ຊື້ສັດເຫລົ່ານີ້ກັບຄືນ;
ສັດເຫລົ່ານີ້ຖືກແຍກໄວ້ໃຫ້ເຮົາໂດຍສະເພາະ. ເຈົ້າຕ້ອງຊິດເລືອດຂອງພວກມັນເທິງແທ່ນບູຊາແລະເຜົາໄຂມັນຂອງພວກມັນເປັນເຄື່ອງບູຊາ
ທີ່ເຜົາດ້ວຍໄຟ, ທີ່ມີກິ່ນຫອມທີ່ພໍພຣະໄທພຣະຢາເວ.[18]ຊີ້ນຂອງມັນຈະເປັນຂອງເຈົ້າ. ເຊັ່ນດຽວກັບຊີ້ນເອິກຖວາຍແລະຊີ້ນກົກຂາຂ້າງຂວາ,
ຊີ້ຂອງພວກມັນຈະເປັນຂອງເຈົ້າ.
[19]ເຄື່ອງບູຊາບໍຣິສຸດທັງຫມົດ ທີ່ຄົນອິດສະຣາເອນໄດ້ຖວາຍແດ່ພຣະຢາເວ, ເຮົາໄດ້ມອບໃຫ້ແກ່ເຈົ້າ,
ແລະແກ່ບັນດາລູກຊາຍແລະລູກສາວຂອງເຈົ້າ ທີ່ຢູ່ກັບເຈົ້າ, ເພື່ອເປັນສ່ວນແບ່ງຕະຫລອດໄປ.
ຊຶ່ງເປັນພັນທະສັນຍາດ້ວຍເກືອຕະຫອດໄປເປັນນິດ, ພັນທະສັນຍາທີ່ຜູກພັນຕະຫລອດໄປ, ຕໍ່ພຣະພັກພຣະຢາເວ
ສໍາລັບເຈົ້າແລະລູກຫລານຂອງເຈົ້າທີ່ຢູ່ກັບເຈົ້າ."[20]ພຣະຢາເວໄດ້ບອກກັບອາໂຣນວ່າ," ພວກເຈົ້າຈະບໍ່ມີມໍລະດົກໃນແຜ່ນດິນຂອງປະຊາຊົນ,
ຫລືພວກເຈົ້າຈະບໍ່ມີສ່ວນແບ່ງໃນຊັບສິນທ່າມກາງປະຊາຊົນ. ເຮົາເປັນສ່ວນແບ່ງແລະເປັນມໍລະດົກຂອງພວກເຈົ້າທ່າມກາງຄົນອິດສະຣາເອນ.
[21]ເບິ່ງເຖີດ ເຮົາໄດ້ມອບຫນຶ່ງສ່ວນສິບທັງຫມົດ, ໃນອິດສະຣາເອນ ເປັນມໍລະດົກແກ່ເຊື້ອສາຍຂອງຄົນ ເລວີ,
ໃນການຕອບແທນສໍາລັບການເຮັດວຽກທີ່ພວກເຂົາຮັບຜິດຊອບເບິ່ງແຍງຫໍເຕັນບ່ອນຊຸມນຸມ.
[22]ຕັ້ງແຕ່ນີ້ໄປຄົນອິດສະຣາເອນຕ້ອງບໍ່ມາໃກ້ຫໍເຕັນບ່ອນຊຸມນຸມ, ບໍ່ດັ່ງນັ້ນພວກເຂົາຈະຕ້ອງຮັບຜິດຊອບຕໍ່ບາບນີ້ແລະຕາຍ.
[23-24]ຄົນເລວີຕ້ອງເຮັດວຽກກ່ຽວກັບຫໍເຕັນບ່ອນຊຸມນຸມ. ພວກເຂົາຈະຕ້ອງຮັບຜິດຊອບບາບໃດກໍຕາມທີ່ກ່ຽວກັບຫໍເຕັນນັ້ນ.
ນີ້ຈະເປັນກົດຖາວອນຕະຫລອດໄປ. ທຸກຊົ່ວອາຍຸຄົນຂອງພວກເຈົ້າ ພວກເຂົາບໍ່ຕ້ອງມີມໍລະດົກທ່າມກາງຄົນອິດສະຣາເອນ.
ເພາະຫນຶ່ງສ່ວນສິບຂອງຄົນອິດສະຣາເອນ, ທີ່ພວກເຂົາໄດ້ຖວາຍເປັນສ່ວນແບ່ງຕໍ່ເຮົາ ຫນຶ່ງສ່ວນສິບເຫລົ່ານີ້ແຫລະທີ່ເຮົາມອບໃຫ້ກັບຄົນເລວີ
ເປັນມໍລະດົກຂອງພວກເຂົາ. ນີ້ເປັນເຫດຜົນທີ່ເຮົາເວົ້າກັບພວກເຂົາວ່າ, 'ພວກເຂົາບໍ່ຕ້ອງມີມໍລະດົກທ່າມກາງຄົນອິດສະຣາເອນ."'
[25]ພຣະຢາເວໄດ້ບອກກັບໂມເຊ ແລະກ່າວວ່າ,[26]"ເຈົ້າຕ້ອງເວົ້າກັບຄົນເລວີແລະບອກພວກເຂົາວ່າ,
ເມື່ອພວກເຈົ້າໄດ້ຮັບຫນຶ່ງສ່ວນສິບຈາກຄົນອິດສະຣາເອນທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າ ເປັນມໍລະດົກຂອງພວກເຈົ້າ ທີ່ມາຈາກພວກເຂົາ,
ພວກເຈົ້າຕ້ອງແບ່ງຈາກຫນຶ່ງສ່ວນສິບນັ້ນຖວາຍພິເສດແດ່ພຣະຢາເວ,[27]ສ່ວນແບ່ງຂອງພວກເຈົ້າພວກເຈົ້າຕ້ອງຖືວ່າ
ຖ້າສ່ວນແບ່ງນັ້ນເປັນຫນຶ່ງສ່ວນສິບຂອງພືດຜົນຈາກເຂົ້າໃຫມ່ແລະເຫລົ້າອະງຸ່ນໃຫມ່.

[28]ພວກເຈົ້າກໍຕ້ອງແບ່ງສ່ວນຫນຶ່ງແດ່ພຣະຢາເວຈາກຫນຶ່ງສ່ວນສິບທັງຫມົດທີ່ພວກເຈົ້າໄດ້ຮັບຈາກຄົນອິດສະຣາເອນ,
ພວກເຈົ້າຕ້ອງຖວາຍສ່ວນແບ່ງຂອງພຣະອົງຈາກພວກເຂົາໃຫ້ກັບອາໂຣນປະໂຣຫິດ.[29]ຈາກຂອງຖວາຍທັງຫມົດທີ່ພວກເຈົ້າໄດ້ຮັບ,
ພວກເຈົ້າຕ້ອງຖວາຍສ່ວນແບ່ງທຸກຢ່າງແດ່ພຣະຢາເວ. ພວກເຈົ້າຕ້ອງເຮັດດັ່ງນີ້ຈາກສິ່ງທີ່ດີທີ່ສຸດແລະບໍຣິສຸດທີ່ສຸດທີ່ໄດ້ມອບໃຫ້ແກ່ພວກເຈົ້າ.'
[30]ເພາະສະນັ້ນເຈົ້າຕ້ອງເວົ້າກັບພວກເຂົາວ່າ,' ເມື່ອພວກເຈົ້າຖວາຍສິ່ງທີ່ດີທີ່ສຸດຂອງສິ່ງນັ້ນ, ແລ້ວສິ່ງນັ້ນຕ້ອງເປັນຜົນທີ່ຄົນເລວີ
ໄດ້ຮັບຈາກລານຟາດເຂົ້າແລະອ່າງເຫລົ້າອະງຸ່ນ.[31]ພວກເຈົ້າຈະກິນສ່ວນທີ່ເຫລືອຂອງເຄື່ອງຖວາຍຂອງພວກເຈົ້າໃນບ່ອນໃດກໍໄດ້,
ທັງເຈົ້າແລະຄອບຄົວຂອງພວກເຈົ້າ, ເພາະສິ່ງນັ້ນເປັນຄ່າຕອບແທນຂອງພວກເຈົ້າສໍາລັບການເຮັດວຽກໃນຫໍເຕັນຊຸມນຸມ.
[32]ພວກເຈົ້າຈະບໍ່ກໍໃຫ້ເກີດຄວາມຜິດບາບໃດໆ ດ້ວຍການກິນແລະການດື່ມສິ່ງນັ້ນ,
ຖ້າພວກເຈົ້າໄດ້ຖວາຍສິ່ງທີ່ດີທີ່ສຸດທີ່ພວກເຈົ້າໄດ້ຮັບແດ່ພຣະຢາເວ.
ແຕ່ພວກເຈົ້າຕ້ອງບໍ່ຫມິ່ນປະຫມາດເຄື່ອງບູຊາບໍຣິສຸດຂອງຄົນອິດສະຣາເອນ, ບໍ່ດັ່ງນັ້ນພວກເຈົ້າຈະຕ້ອງຕາຍ.'"

 generated on Tue Jun 17 19:01:42 2025

19 [1]ພຣະຢາເວໄດ້ບອກກັບໂມເຊແລະອາໂຣນ. ພຣະອົງກ່າວວ່າ,[2]" ຊຶ່ງເປັນກົດທີ່ເຮົາສັ່ງເຈົ້າ:
ຈົ່ງບອກຄົນອິດສະຣາເອນວ່າໃຫ້ພວກເຂົານຳງົວແມ່ສີແດງທີ່ມີສຸຂະພາບດີ ແລະ ບໍ່ມີຕຳນິ, ແລະບໍ່ເຄີຍໃຊ້ວຽກຈັກເທື່ອ.

[3]ຈົ່ງໃຫ້ງົວແມ່ໂຕນີ້ແກ່ເອເລອາຊາປະໂຣຫິດ. ເຂົາຕ້ອງນຳມັນອອກໄປນອກຄ້າຍ, ແລະຄົນຫນຶ່ງຕ້ອງຂ້າມັນຕໍ່ຫນ້າເຂົາ.
[4]ເອເລອາຊາປະໂຣຫິດຕ້ອງເອົານິ້ວຂອງເຂົາຈຸ່ມເລືອດຂອງມັນມາບາງສ່ວນແລະຊິດເລືອດນັ້ນໄປທາງຫນ້າບ່ອນຫໍເຕັນບ່ອນປະຊຸມນັ້ນເຈັດເທື່ອ.
[5]ປະໂຣຫິດອີກຄົນຫນຶ່ງຕ້ອງເຜົາງົວແມ່ໂຕນັ້ນຕໍ່ຫນ້າເຂົາ. ເຂົາຕ້ອງເຜົາຫນັງຂອງມັນ, ຊີ້ນຂອງມັນ,
ແລະເລືອດຂອງມັນພ້ອມດ້ວຍເຄື່ອງໃນໄສ້ພຸງຂອງມັນ.[6]ປະໂຣຫິດຄົນນັ້ນຕ້ອງເອົາໄມ້ສົນສີດາ, ໃບຕົ້ນຫຸສົບ, ແລະດ້າຍສີແດງເຂັ້ມມາ,
ແລະໂຍນທັງຫມົດນີ້ລົງໄປທາງກາງຂອງງົວແມ່ທີ່ກຳລັງເຜົາໄຫມ້ຢູ່ນັ້ນ.
[7]ແລ້ວເຂົາຕ້ອງຊັກເສື້ອຜ້າຂອງເຂົາແລະຊຳລະຕົວໃນນ້ຳ. ຈາກນັ້ນເຂົາກໍ່ຈະກັບມາຍັງຄ້າຍພັກ, ທີ່ເພິ່ນຍັງຄົງເປັນມົນທິນຢູ່ຈົນເຖິງຄໍ່າ.
[8]ຄົນທີ່ເຜົາງົວສາວໂຕນັ້ນຕ້ອງຊັກເສື້ອຜ້າຂອງຕົນໃນນ້ຳແລະຊຳລະຕົວໃນນ້ຳ. ເພິ່ນຍັງເປັນມົນທິນຈົນເຖິງຄໍ່າ.
[9]ແລ້ວໃຫ້ຊາຍຜູ້ຫນຶ່ງ ທີ່ບໍ່ເປັນມົນທິນ ຕາມກົດບັນຍັດໄປເກັບເອົາຂີ້ເຖົ່າຂອງງົວແມ່ ແລ້ວເອົາໄປວາງຮັກສາໄວ້ໃນບ່ອນທີ່ສະອາດນອກຄ້າຍ
ຕາມກົດບັນຍັດ ເພື່ອຊຸມຊົນອິດສະຣາເອນ. ຈະໄດ້ເອົາມາໃຊ້ເປັນນ້ຳຊຳລະມົນທິນ ເພື່ອລົບລ້າງບາບ.[10]ຊາຍທີ່ຊ້ອນຂີ້ເຖົ່ານັ້ນ
ຕ້ອງຊັກເຄື່ອງນຸ່ງຫົ່ມ ຂອງຕົນ ແຕ່ລາວຍັງຈະເປັນມົນທິນຈົນຮອດຄໍ່າ. ໃຫ້ຊາວອິດສະຣາເອນ ຫລື ຊາວຕ່າງດ້າວ ທີ່ອາໄສຢູ່ນຳນັ້ນ
ປະຕິບັດຕາມ ລະບຽບການນີ້ ທຸກຍຸກທຸກສະໄຫມສືບໄປ.
[11]ໃຜກໍ່ຕາມທີ່ແຕະຕ້ອງສົບຂອງຄົນໃດຄົນຫນຶ່ງກໍ່ຈະເປັນມົນທິນຢູ່ເຈັດວັນ.[12]ຄົນນັ້ນຕ້ອງຊຳລະຕົນເອງໃຫ້ບໍລິສຸດໃນວັນທີສາມແລະວັນທີເຈັດ.
ແລ້ວເຂົາຈຶ່ງຈະສະອາດ. ແຕ່ຖ້າເຂົາບໍ່ຊຳລະຕົນເອງໃຫ້ບໍລິສຸດໃນວັນທີສາມ, ແລ້ວເຂົາກໍ່ຈະບໍ່ສະອາດໃນວັນທີເຈັດ.
[13]ໃຜກໍ່ຕາມທີ່ແຕະຕ້ອງສົບ, ຂອງຄົນທີ່ຕາຍ, ແລະບໍ່ຊຳລະຕົນເອງໃຫ້ບໍລິສຸດຄົນນັ້ນກໍ່ເຮັດໃຫ້ຫໍເຕັນສັກສິດຂອງພຣະຢາເວເປັນມົນທິນ.
ຄົນນັ້ນຕ້ອງຖືກຕັດອອກຈາກອິດສະຣາເອນ ເພາະນ້ຳຊຳລະມົນທິນບໍ່ໄດ້ຊຳລະເທິງຕົວເຂົາ. ເຂົາຈະຍັງຄົງເປັນມົນທິນຢູ່;
ມົນທິນຂອງເຂົາຈະຍັງຄົງຢູ່ເທິງຕົວຂອງເຂົາ.
[14]ນີ້ເປັນກົດສຳລັບຄົນທີ່ຕາຍໃນຫໍເຕັນ. ທຸກຄົນທີ່ເຂົ້າໄປໃນເຕັນນັ້ນ ແລະທຸກຄົນທີ່ຢູ່ໃນເຕັນນັ້ນຢູ່ແລ້ວຈະເປັນມົນທິນຢູ່ເຈັດວັນ.
[15]ໄຫກັບຫມໍ້ທຸກຫນ່ວຍທີ່ເປີດຢູ່ບໍ່ມີຝາອັດກໍ່ຈະເປັນມົນທິນ.[16]ເຊັ່ນດຽວກັນ, ຄົນທີ່ຢູ່ພາຍນອກຫໍເຕັນທີ່ໄດ້ແຕະຕ້ອງຄົນທີ່ຖືກຂ້າຕາຍດ້ວຍດາບ,
ສົບໃດໆ, ກະດູກມະນຸດ, ຫລືຊຸມຝັງສົບຄົນນັ້ນກໍ່ຈະເປັນມົນທິນຢູ່ເຈັດວັນ.
[17]ຈົ່ງເຮັດດັ່ງນີ້ສຳລັບຄົນທີ່ເປັນມົນທິນ: ຈົ່ງເອົາຂີ້ເຖົ່າຈາກເຄື່ອງເຜົາບູຊາລົບລ້າງບາບ ແລະ ປະສົມຂີ້ເຖົ່ານັ້ນລົງໄປໃນນ້ຳທີ່ສະອາດໃນຖ້ວຍ.
[18]ຈາກນັ້ນຄົນທີ່ສະອາດຕ້ອງເອົາໃບຕົ້ນຫຸສົບ, ຈຸ່ມລົງໃນນ້ຳນັ້ນ, ແລະຊິດໃສ່ເທິງເຕັນນັ້ນ, ເທິງພາຊະນະທຸກໆສິ່ງພາຍໃນເຕັນ,
ເທິງຄົນເຫລົ່ານັ້ນທີ່ຢູ່ໃນນັ້ນ, ແລະເທິງຄົນທີ່ແຕະຕ້ອງກະດູກ, ຄົນທີ່ຖືກຂ້າຕາຍ, ສົບຫລືຊຸມຝັງສົບ.[19]ໃນວັນທີສາມແລະໃນວັນທີເຈັດ,
ຄົນທີ່ສະອາດຕ້ອງຊິດນ້ຳໃສ່ຄົນທີ່ເປັນມົນທິນ. ໃນວັນທີເຈັດຄົນທີ່ເປັນມົນທິນຕ້ອງຊຳລະຕົນເອງໃຫ້ບໍລິສຸດ.
ເຂົາຕ້ອງຊັກເສື້ອຜ້າຂອງເຂົາແລະຊຳລະຕົວໃນນ້ຳ. ພໍເຖິງຕອນຄໍ່າເຂົາກໍ່ຈະສະອາດ.
[20]ແຕ່ຄົນທີ່ຍັງເປັນມົນທິນຢູ່, ຄົນທີ່ບໍ່ຍອມຊຳລະຕົນເອງໃຫ້ບໍລິສຸດ ຄົນນັ້ນກໍ່ຈະຖືກຕັດອອກຈາກຊຸມຊົນ,
ເພາະເຂົາໄດ້ເຮັດໃຫ້ສະຖານນະມັດສະການຂອງພຣະຢາເວເປັນມົນທິນ. ນ້ຳຊຳລະມົນທິນບໍ່ໄດ້ຊິດໃສ່ເທິງຕົວເຂົາ; ເຂົາຈຶ່ງຍັງຄົງເປັນມົນທິນ.
[21]ນີ້ເປັນກົດຕະຫລອດໄປເປັນນິດກ່ຽວກັບສະຖານະການເຫລົ່ານີ້. ຄົນທີ່ຊິດນ້ຳຊຳລະມົນທິນຕ້ອງຊັກເສື້ອຜ້າຂອງເຂົາ.
ຄົນທີ່ແຕະຕ້ອງນ້ຳຊຳລະມົນທິນກໍ່ຈະເປັນມົນທິນຢູ່ຈົນເຖິງເວລາຄໍ່າ.[22]ຄົນທີ່ແຕະຕ້ອງສິ່ງໃດກໍ່ຕາມທີ່ເປັນມົນທິນກໍ່ຈະເປັນມົນທິນ.
ຄົນທີ່ແຕະຕ້ອງສິ່ງນັ້ນຈະເປັນມົນທິນຈົນເຖິງເວລາຄໍ່າ."


generated on Tue Jun 17 19:01:42 2025

20 [1]ຊຸມຊົນທັງຫມົດຂອງອິດສະຣາເອນ, ກໍເຂົ້າໄປໃນຖິ່ນທຸລະກັນດານຊີນ, ໃນເດືອນທີຫນຶ່ງ, ພວກເຂົາພັກຢູ່ທີ່ກາເດັດ.
ມີລີອາມໄດ້ເສຍຊີວິດແລະໄດ້ຖືກຝັງໄວ້ທີ່ນັ້ນ.

[2]ໃນບ່ອນນັ້ນ ບໍ່ມີນ້ຳໃຫ້ກັບຊຸມຊົນ, ດັ່ງນັ້ນ ພວກເຂົາຈຶ່ງມາເຕົ້າໂຮມກັນຕໍ່ຕ້ານໂມເຊ ແລະ ອາໂຣນ.[3]ປະຊາຊົນໄດ້ຈົ່ມຮ້າຍວ່າໂມເຊ.
ພວກເຂົາກ່າວວ່າ," ຕອນທີ່ພີ່ນ້ອງອິດສະຣາເອນ ຂອງພວກເຮົາ ໄດ້ຕາຍຕໍ່ພຣະພັກພຣະຢາເວ!
ຖ້າຫາກເຮົາໄດ້ຕາຍດ້ວຍກໍຄົງເປັນການດີກວ່າ.
[4]ເປັນຫຍັງ ພວກທ່ານຈຶ່ງນຳຊຸມຊົນຂອງພຣະຢາເວເຂົ້າມາ ໃນຖິ່ນທຸລະກັນດານນີ້, ເພື່ອຢາກໃຫ້ພວກເຮົາແລະຝູງສັດ
ຂອງພວກເຮົາຕາຍໃນທີ່ນີ້ຊັ້ນບໍ?[5]ເປັນຫຍັງ ພວກທ່ານຈຶ່ງໃຫ້ພວກເຮົາອອກມາຈາກປະເທດເອຢິບ ແລະ ເຂົ້າໄປໃນບ່ອນທຸກຍາກລຳບາກ
ເຊັ່ນນີ້? ຊຶ່ງບໍ່ມີພືດພັນຫຍັງເກີດຂຶ້ນ? ໃນບ່ອນນີ້ບໍ່ມີເຂົ້າກິນ, ຫມາກເດື່ອເທດ, ອະງຸ່ນ, ຫລືຫມາກພິລາ ແລະແມ່ນແຕ່ນ້ຳ ຈະດື່ມກໍຍັງບໍ່ມີ.”
[6]ດັ່ງນັ້ນໂມເຊ ແລະ ອາໂຣນ ຈຶ່ງອອກໄປຈາກຂ້າງຫນ້າທີ່ປະຊຸມນັ້ນ. ພວກເຂົາໄປຢືນຢູ່ທາງປະຕູເຂົ້າຫໍເຕັນປະຊຸມ. ແລະຫມູບຫນ້າລົງດິນ.
ແສງສຸກໃສແຫ່ງສະຫງ່າຣາສີຂອງພຣະຢາເວ ກໍໄດ້ປາກົດຂຶ້ນໃຫ້ພວກເຂົາເຫັນ.
[7]ພຣະຢາເວກ່າວກັບໂມເຊ ວ່າ,[8]“ຈົ່ງຈັບເອົາໄມ້ຄ້ອນເທົ້າໄປ ແລະເອີ້ນປະຊຸມຊຸມຊົນ, ເຈົ້າ, ແລະ ອາໂຣນອ້າຍຂອງເຈົ້າ,
ຈົ່ງເວົ້າກັບໂງ່ນຫີນທີ່ຢູ່ຕໍ່ຫນ້າພວກເຂົາ, ແລະ ສັ່ງຫີນນັ້ນໃຫ້ນ້ຳໄຫລອອກມາ. ເຈົ້າຈະໄດ້ນ້ຳໄຫລອອກມາຈາກໂງ່ນຫີນສຳລັບປະຊາຊົນ
ສຳລັບພວກເຂົາ ແລະ ສັດຂອງພວກເຂົາໄດ້ດື່ມ.”[9]ແລ້ວໂມເຊ ກໍອອກໄປ ແລະ ຖືເອົາໄມ້ຄ້ອນເທົ້າທີ່ຢູ່ຕໍ່ຫນ້າ ພຣະຢາເວ,
ຕາມທີ່ພຣະຢາເວຊົງໄດ້ສັ່ງໄວ້ໃຫ້ເຂົາເຮັດ.
[10]ແລ້ວໂມເຊແລະອາໂຣນ ກໍເອີ້ນຊຸມຊົນ ມາລວມກັນ ຢູ່ຕໍ່ຫນ້າໂງ່ນຫີນນັ້ນ. ໂມເຊ ເວົ້າກັບພວກເຂົາວ່າ, “ບັດນີ້ຈົ່ງຟັງທາງນີ້,
ພວກເຈົ້າຄົນກະບົດເອີຍ ເຮົາຈະຕ້ອງເອົານ້ຳອອກມາຈາກໂງ່ນຫີນນີ້ ໃຫ້ພວກເຈົ້າດື່ມຊັ້ນບໍ?”[11]ແລ້ວ ໂມເຊ
ກໍຍົກໄມ້ຄ້ອນເທົ້າຂອງເຂົາຂຶ້ນຕີໂງ່ນຫີນສອງເທື່ອ, ແລະ ນ້ຳກໍໄຫລທະລຸອອກມາຢ່າງ ຫລວງຫລາຍ. ແລ້ວຊຸມຊົນກໍໄດ້ດື່ມ, ແລະ
ຝູງສັດທັງປວງກໍພາກັນດື່ມ.
[12]ແລ້ວພຣະຢາເວ ໄດ້ກ່າວຕໍ່ ໂມເຊ ແລະ ອາໂຣນ ວ່າ, “ຍ້ອນວ່າເຈົ້າທັງສອງບໍ່ໄດ້ວາງໃຈເຮົາ ຫລືຖວາຍກຽດແກ່ເຮົາເປັນອົງບໍລິສຸດສັກສິດ
ໃນສາຍຕາປະຊາຊົນອິດສະຣາເອນ, ພວກເຈົ້າຈະບໍ່ໄດ້ນຳພາ ພວກເຂົາເຂົ້າໄປຢູ່ໃນດິນແດນ ບ່ອນທີ່ເຮົາ ໄດ້ສັນຍາວ່າ
ຈະມອບໃຫ້ແກ່ພວກເຂົານັ້ນ.”[13]ສະຖານທີ່ນັ້ນ ຈຶ່ງມີຊື່ເອີ້ນວ່ານ້ຳແຫ່ງເມຣິບາ ເພາະບ່ອນທີ່ປະຊາຊົນອິດສະຣາເອນ ໄດ້ຈົ່ມຮ້າຍ
ໃສ່ພຣະພຣະຢາເວທີ່ນັ້ນ, ແລະ ບ່ອນທີ່ພຣະອົງ ໄດ້ສຳແດງໃຫ້ພວກເຂົາ ເຫັນວ່າພຣະອົງຊົງເປັນອົງບໍຣິສຸດສັກສິດຕໍ່ພວກເຂົາ.
[14]ໂມເຊໄດ້ສົ່ງ ຜູ້ນຳຂ່າວຈາກເມືອງ ກາເດັດ ໄປຫາກະສັດແຫ່ງດິນແດນ ເອໂດມ ວ່າ: “ຂ່າວນີ້ ແມ່ນສົ່ງມາຈາກຍາດຕິພີ່ນ້ອງຂອງທ່ານ
ເຜົ່າຕ່າງໆຂອງຊາດອິດສະຣາເອນ. ທ່ານກໍຮູ້ເຖິງຄວາມຍາກລຳບາກທີ່ພວກເກີດຂຶ້ນກັບພວກເຮົາແລ້ວ.[15]ທ່ານຮູ້ວ່າບັນພະບຸລຸດຂອງພວກເຮົາ
ໄດ້ໄປຍັງປະເທດເອຢິບ ແລະອາໄສຢູ່ໃນເອຢິບເປັນເວລາຍາວນານ.
ຊາວເອຢິບໄດ້ກົດຂີ່ຂົ່ມເຫັງເຮົາຢ່າງຫນັກແລະລວມທັງບັນພະບຸລຸດຂອງພວກເຮົາດ້ວຍ.[16]ເມື່ອພວກເຮົາຮ້ອງທູນຕໍ່ພຣະຢາເວ.
ພຣະອົງຊົງໄດ້ຍິນສຽງຂອງພວກເຮົາແລະສົ່ງເທວະດາຕົນຫນຶ່ງມາແລະນຳເຮົາອອກມາຈາກ ເອຢິບ. ເບິ່ງແມ, ພວກເຮົາຢູ່ໃນກາເດັດ
ເມືອງທີ່ຢູ່ໃກ້ກັບເຂດແດນຂອງທ່ານນີ້ເອງ.
[17]ຂ້ານ້ອຍຂໍໃຫ້ທ່ານ ຈົ່ງອະນຸຍາດໃຫ້ພວກເຮົາ ຜ່ານດິນແດນຂອງທ່ານໄປດ້ວຍ. ພວກເຮົາ ແລະ ຝູງສັດຈະບໍ່ຜ່ານ ເຂົ້າໄປໃນທົ່ງນາ, ຫລື
ສວນອະງຸ່ນ ແລະ ພວກເຮົາກໍຈະບໍ່ດື່ມນ້ຳຈາກສ້າງຂອງທ່ານດ້ວຍ. ພວກເຮົາຈະໄປຕາມທາງຫລວງ.
ພວກເຮົາຈະບໍ່ລ້ຽວໄປທາງຂວາມືຫລືທາງຊ້າຍ ຈົນກວ່າພວກເຮົາໄດ້ພົ້ນເຂດຂອງທ່ານໄປ.”
[18]ແຕ່ກະສັດແຫ່ງເອໂດມໄດ້ຕອບເຂົາວ່າ, “ພວກເຈົ້າຈະຜ່ານເຂົ້າມາທີ່ນີ້ບໍ່ໄດ້. ຖ້າພວກເຈົ້າເຂົ້າມາ,
ເຮົາຈະມາພ້ອມກັບດາບທີ່ຈະໂຈມຕີພວກເຈົ້າ.”[19]ແລ້ວປະຊາຊົນອິດສະຣາເອນ ກໍບອກທ່ານວ່າ, “ພວກເຮົາຈະຢູ່ຕາມທາງຫລວງ ເທົ່ານັ້ນ.
ຖ້າພວກເຮົາຫລື ຝູງສັດຂອງເຮົາຫາກດື່ມນ້ຳຂອງພວກທ່ານ ພວກເຮົາຈະຈ່າຍຄ່າຕອບແທນໃຫ້ພວກທ່ານ.
ຂໍພຽງໃຫ້ພວກເຮົາຍ່າງຜ່ານໄປເທົ່ານັ້ນ ໂດຍບໍ່ເຮັດສິ່ງໃດເລີຍ.”
[20]ແຕ່ກະສັດແຫ່ງເອໂດມຕອບວ່າ," ພວກເຈົ້າຈະຜ່ານເຂົ້າມາບໍ່ໄດ້.”
ດັ່ງນັ້ນກະສັດແຫ່ງເອໂດມຈຶ່ງອອກມາຕໍ່ສູ້ກັບອິດສະຣາເອນດ້ວຍມືທີ່ເຂັ້ມແຂງພ້ອມກັບທະຫານຫລວງຫລາຍ.
[21]ກະສັດແຫ່ງເອໂດມປະຕິເສດທີ່ຈະອະນຸຍາດໃຫ້ຊາວອິດສະຣາເອນ ຂ້າມຜ່ານເຂດ. ເພາະເຫດນີ້,
ຊາວອິດສະຣາເອນຈຶ່ງລ້ຽວອອກໄປຈາກແຜ່ນດິນເອໂດມ.
[22]ດັ່ງນັ້ນຄົນອິດສະຣາເອນຈຶ່ງອອກຈາກ ກາເດັດ. ຊຸມຊົນທັງຫມົດຂອງອິດສະຣາເອນກໍມາຮອດພູເຂົາ ໂຮເຣ.[23]ພຣະຢາເວໄດ້ກ່າວແກ່ໂມເຊ
ແລະອາໂຣນທີ່ພູເຂົາໂຮເຣ, ທີ່ຢູ່ຕິດເຂດແດນຂອງເອໂດມ. ພຣະອົງກ່າວວ່າ,[24]“ອາໂຣນ ຕ້ອງຖືກລວມເຂົ້າໄປຢູ່ກັບຄົນຂອງເຂົາ,
ເພາະເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາໄດ້ມອບໃຫ້ແກ່ຊາວອິດສະຣາເອນ.
ນີ້ເພາະພວກເຈົ້າທັງສອງໄດ້ກະບົດຕໍ່ຄຳສັ່ງຂອງເຮົາທີ່ນ້ຳແຫ່ງເມຣິບາ.
[25]ຈົ່ງນຳອາໂຣນ ແລະ ເອເລອາຊາ ລູກຊາຍຂອງລາວມາ, ແລະພາພວກເຂົາຂຶ້ນໄປເທິງພູເຂົາໂຮເຣ.
[26]ຈົ່ງຖອດຊຸດເສື້ອຂອງປະໂຣຫິດຂອງອາໂຣນ ອອກແລະສວມໃສ່ຊຸດນັ້ນໃຫ້ກັບເອເລອາຊາລູກຊາຍຂອງລາວ.
ອາໂຣນຕ້ອງຕາຍແລະຖືກລວມໄປຢູ່ກັບຄົນຂອງເຂົາຢູ່ທີ່ນັ້ນ.”
[27]ໂມເຊ ກໍເຮັດຕາມທີ່ພຣະຢາເວໄດ້ສັ່ງໄວ້. ພວກເຂົາໄດ້ຂຶ້ນໄປທີ່ເທິງພູເຂົາ ໂຮເຣ ຕໍ່ຫນ້າຊຸມຊົນທັງຫມົດ[28]ໂມເຊ
ກໍໄດ້ຖອດເສື້ອປະໂຣຫິດອອກຈາກອາໂຣນ ແລະ ສວມຊຸດນັ້ນໃສ່ໃຫ້ເອເລອາຊາ ຜູ້ເປັນລູກຊາຍຂອງລາວ.
ອາໂຣນຕາຍຢູ່ທີ່ເທິງຈອມພູເຂົານັ້ນ; ແລ້ວໂມເຊ ແລະ ເອເລອາຊາ ຈຶ່ງກັບລົງມາ.[29]ເມື່ອຊຸມຊົນທັງຫມົດຮູ້ວ່າ ອາໂຣນໄດ້ຕາຍແລ້ວ
ຊົນຊາດທັງຫມົດກໍຮ້ອງໄຫ້ໄວ້ທຸກໃຫ້ອາໂຣນເປັນເວລາສາມສິບວັນ.

21 [1]ເມື່ອກະສັດແຫ່ງເມືອງ ອາຣັດ, ຊາວການາອານຜູ້ອາໄສຢູ່ໃນເນເກບ,
ໄດ້ຍິນວ່າຊາວອິດສະຣາເອນກຳລັງເດີນທາງມາຕາມທາງໄປອະທາຣິມ, ຈຶ່ງອອກມາຕໍ່ສູ້ກັບອິດສະຣາເອນ ແລະ
ໄດ້ຈັບບາງຄົນມາເປັນຊະເລີຍເສິກ.[2]ຄົນອິດສະຣາເອນ ໄດ້ປະຕິຍານຕໍ່ພຣະຢາເວວ່າ, “ຖ້າພຣະອົງຊົງໃຫ້ພວກຂ້ານ້ອຍ ຕີຊະນະຊາວເມືອງນີ້
ພວກຂ້ານ້ອຍກໍຈະທຳລາຍບ້ານເມືອງຂອງພວກເຂົາໃຫ້ດັບກ້ຽງ.”[3]ພຣະຢາເວໄດ້ຊົງຟັງສຽງຂອງຊາວອິດສະຣາເອນ
ແລະພຣະອົງໄດ້ຊົງໃຫ້ພວກເຂົາຕີຊະນະເຫນືອຄົນການາອານ. ພວກເຂົາຈຶ່ງທຳລາຍຊາວເມືອງນັ້ນ ແລະ ເມືອງຕ່າງໆ
ຂອງພວກເຂົາຈົນສິ້ນຊາກ. ແລະ ໄດ້ໃສ່ຊື່ບ່ອນນັ້ນວ່າ ໂຮມາ.

[4]ພວກເຂົາໄດ້ເດີນທາງ ອອກຈາກພູເຂົາ ໂຮເຣ ໄປຕາມທາງທີ່ໄປຍັງທະເລແດງ ເພື່ອອ້ອມໄປທາງເຂດແດນຂອງ ເອໂດມ.
ປະຊາຊົນພາກັນຫມົດຄວາມອົດທົນ[5]ປະຊາຊົນຈຶ່ງໄດ້ຈົ່ມຮ້າຍຕໍ່ພຣະເຈົ້າ ແລະ ຕໍ່ໂມເຊ ວ່າ, “ເປັນຫຍັງ
ທ່ານຈຶ່ງນຳພາພວກເຮົາອອກຈາກປະເທດເອຢິບ ມາຕາຍຢູ່ໃນກາງຖິ່ນທຸລະກັນດານນີ້? ບ່ອນບໍ່ມີອາຫານ, ບໍ່ມີນໍ້າ, ແລະ
ພວກເຮົາບໍ່ອາດທົນກິນອາຫານຕາຍໆ ເຊັ່ນນີ້ໄດ້ດອກ.”
[6]ແລ້ວພຣະຢາເວ ກໍໄດ້ສົ່ງງູພິດ ມາທ່າມກາງປະຊາຊົນ. ງູພິດກໍຕອດປະຊາຊົນ; ຕາຍຢ່າງຫລວງຫລາຍ.[7]ປະຊາຊົນຈຶ່ງມາຫາໂມເຊ ແລະ
ກ່າວວ່າ, “ພວກເຮົາໄດ້ເຮັດບາບແລ້ວ ເພາະພວກເຮົາໄດ້ຕໍ່ວ່າພຣະຢາເວແລະທ່ານ. ຂໍທ່ານຈົ່ງພາວັນນາອະທິຖານຕໍ່ພຣະຢາເວ
ເພື່ອທີ່ພຣະອົງຈະຊົງເອົາງູອອກໄປຈາກເຮົາ." ດັ່ງນັ້ນ ໂມເຊ ຈຶ່ງໄດ້ພາວັນນາ ອະທິຖານຂໍເພື່ອປະຊາຊົນ.
[8]ພຣະຢາເວ ກໍໄດ້ບອກກັບໂມເຊວ່າ," ໃຫ້ເຮັດງູເປັນທອງສຳຣິດ ຕອກຕິດໄວ້ກັບເສົາ
ເພື່ອວ່າຜູ້ໃດຜູ້ຫນຶ່ງທີ່ຖືກງູຕອດເມື່ອແນມເບິ່ງງູທອງສຳຣິດນັ້ນແລ້ວກໍໄດ້ຮັບການປິ່ນປົວໃຫ້ຫາຍດີ.[9]ດັ່ງນັ້ນ ໂມເຊ
ຈຶ່ງເຮັດງູທອງສຳຣິດໂຕຫນຶ່ງແລະຕອກໄວ້ກັບເສົາ. ເມື່ອງູຕອດຄົນໃດ ເມື່ອຫລຽວເບິ່ງງູທອງສຳຣິດນັ້ນ, ເຂົາກໍລອດຊີວິດ.
[10]ແລ້ວຊາວອິດສະຣາເອນ ກໍອອກ ເດີນທາງຕໍ່ໄປ ແລະຕັ້ງຄ້າຍ ທີ່ເມືອງໂອໂບດ.[11]ພວກເຂົາເດີນທາງອອກຈາກທີ່ນັ້ນແລະຕັ້ງ ຄ້າຍພັກຢູ່ທີ່
ອີເຢອາບາຣິມ ໃນຖິ່ນທຸລະກັນດານທີ່ຫັນຫນ້າໄປທາງທິດຕາເວັນອອກຂອງເຂດແດນ ຊາວໂມອາບ.
[12]ຈາກທີ່ນັ້ນພວກເຂົາກໍເດີນທາງຕໍ່ໄປແລະຕັ້ງຄ້າຍພັກຢູ່ທີ່ຮ່ອມພູ ເສເຣັດ.
[13]ຈາກທີ່ນັ້ນພວກເຂົາເດີນທາງຕໍ່ໄປແລະຕັ້ງຄ້າຍຢູ່ອີກຝັ່ງຫນຶ່ງຂອງແມ່ນ້ຳ ອາໂນນ, ໃນຖິ່ນທຸລະກັນດານ ຊຶ່ງເປັນສ່ວນທີ່ຕໍ່ຈາກເຂດແດນ
ຂອງຊາວ ອາໂມຣິດ. (ແມ່ນໍ້າ ອາໂນນ ເປັນເຂດແດນຂອງໂມອາບ, ທີ່ກັ້ນລະຫວ່າງໂມອາບແລະຊາວອາໂມ.)
[14]ດ້ວຍເຫດນີ້ ທີ່ເມືອງນີ້ໄດ້ກ່າວໄວ້ໃນປຶ້ມບັນທຶກຂອງສົງຄາມຂອງພຣະຢາເວວ່າ, "ວາເຮັບ ໃນເຂດຂອງຊູຟາ ແລະ ຮ່ອມພູທັງຫລາຍ
ຂອງແມ່ນໍ້າອາກໂນນ,[15]ເນີນຂອງຮ່ອມພູທັງຫລາຍ ຊຶ່ງຍາວໄປເຖິງເມືອງ ອາຣະ ແລະ ລົງໄປຕາມເຂດແດນຂອງໂມອາບ.”
[16]ຈາກທີ່ນັ້ນ ພວກເຂົາໄດ້ເດີນທາງໄປ ຍັງເມືອງເບອໍ, ຊຶ່ງເປັນບໍ່ນໍ້າ ທີ່ພຣະຢາເວໄດ້ບອກໂມເຊ ວ່າ,
“ຈົ່ງເອີ້ນປະຊາຊົນໃຫ້ມາເຕົ້າໂຮມກັນເພື່ອເຮົາຈະໃຫ້ນ້ຳດື່ມແກ່ພວກເຂົາ.”
[17]ແລ້ວຊາວອິດສະຣາເອນກໍຮ້ອງເພງນີ້ ວ່າ: “ຈົ່ງພົ່ງຂຶ້ນມາ, ບໍ່ນໍ້າເອີຍ. ຈົ່ງຮ້ອງເພງເຖິງບໍ່ນໍ້ານີ້.[18]ບໍ່ນໍ້າທີ່ຜູ້ນຳຂອງເຮົາໄດ້ຂຸດໄວ້,
ບໍ່ນໍ້າທີ່ບັນດາເຈົ້ານາຍຂອງປະຊາຊົນໄດ້ຂຸດກະບອງ ແລະໄມ້ຄ້ອນເທົ້າຂອງພວກເຂົາ." ແລ້ວຈາກຖິ່ນທຸລະກັນດານນັ້ນ
ພວກເຂົາໄດ້ເດີນທາງໄປເຖິງ ມັດຕານາ.
[19]ຈາກມັດຕານາ ພວກເຂົາກໍເດີນທາງໄປຍັງນາຮາລີເອນ, ແລະ ຈາກນາຮາລີເອນ ໄປເຖິງບາໂມດ,[20]ແລະ ຈາກບາໂມດ
ໄປເຖິງຮ່ອມພູທີ່ເຂດແດນຂອງໂມອາບ. ນັ້ນຄືທີ່ຊຶ່ງຫລຽວເຫັນຈາກຍອດພູ ປີຊະກາ ຊຶ່ງແນມອອກໄປເຫັນຖິ່ນທຸລະກັນດານນີ້.
[21]ແລ້ວຄົນອິດສະຣາເອນ ຈຶ່ງສົ່ງຜູ້ສົ່ງຂ່າວສານໄປບອກສີໂຫນ ກະສັດຂອງ ຊາວອາໂມ ວ່າ,[22]“ກະລຸນາໃຫ້ພວກເຮົາຜ່ານດິນແດນຂອງທ່ານໄປ.
ພວກເຮົາ ຈະບໍ່ລ້ຽວເຂົ້າໄປໃນໄຮ່ນາ ຫລື ສວນອະງຸ່ນໃດໆເລີຍ. ເຮົາຈະບໍ່ດື່ມນໍ້າຈາກບໍ່ ຂອງທ່ານພວກເຮົາຈະເດີນທາງໄປຕາມທາງຫລວງ.
ຈົນກວ່າເຮົາຈະຂ້າມພົ້ນເຂດແດນຂອງທ່ານອອກໄປ.”[23]ແຕ່ ກະສັດສີໂຫນ ບໍ່ຍອມໃຫ້ຄົນອິດສະຣາເອນຜ່ານເຂົ້າເຂດແດນຂອງພວກເຂົາໄປ,
ສີໂຫນໄດ້ຮວບຮວມເອົາກອງທະຫານທັງຫມົດ ແລະໂຈມຕີຄົນອິດສະຣາເອນ ໃນຖິ່ນທຸລະກັນດານ. ພວກເຂົາມາທີ່ຢາຮາດ,
ແລະບຸກໂຈມຕີຊາວອິດສະຣາເອນ.
[24]ຊາວອິດສະຣາເອນກໍໂຈມຕີກອງທັບຂອງສີໂຫນດ້ວຍຄົມດາບ ແລະ ຍຶດດິນແດນຂອງ ພວກເຂົາຕັ້ງແຕ່ແມ່ນໍ້າ ອາກໂນນ
ຈົນເຖິງແມ່ນໍ້າຢັບໂບກ, ໄກອອກໄປຈົນເຖິງດິນແດນຂອງ ຊາວອຳໂມນ. ໃນຕອນນັ້ນເຂດແດນຂອງຊາວອຳໂມນ ໄດ້ມີການປ້ອງກັນໄວ້.
[25]ຄົນອິດສະຣາເອນຈຶ່ງໄດ້ຍຶດເມືອງຂອງຊາວອາໂມຣິດທັງຫມົດແລະອາໄສຢູ່ໃນເມືອງເຫລົ່ານັ້ນ, ພ້ອມທັງເມືອງເຮັດຊະໂບນ
ແລະຫມູ່ບ້ານທັງຫມົດຂອງເມືອງນັ້ນ.[26]ເຮັດຊະໂບນ ເປັນເມືອງຫລວງຂອງເຈົ້າສີໂຫນ ກະສັດຂອງຊາວອາໂມຣິດ;
ຜູ້ທີ່ສູ້ຮົບກັບກະສັດຄົນກ່ອນຂອງໂມອາບ. ສີໂຫນໄດ້ຍຶດດິນແດນຂອງເຂົາທັງຫມົດຕັ້ງແຕ່ເຂດແດນຂອງເຂົາຈົນຮອດແມ່ນໍ້າ ອາກໂນນ.
[27]ນັ້ນຄືເຫດຜົນທີ່ຄົນເຫລົ່ານັ້ນເວົ້າເປັນຄຳສຸພາສິດວ່າ, "ຈົ່ງມາທີ່ເຮັດຊະໂບນ.
ຂໍໃຫ້ສ້າງເມືອງເຈົ້າສີໂຫນຂຶ້ນມາໃຫມ່ແລະສະຖາປານາຂຶ້ນອີກຄັ້ງ.[28]ໄຟໄດ້ພົ່ງອອກຈາກ ເຮັດຊະໂບນ, ແປວໄຟຈາກເມືອງຂອງເຈົ້າສີໂຫນ
ໄດ້ເຜົາຜານເມືອງອາຣາ ແຫ່ງໂມອາບ, ແລະບັນດາເຈົ້າທີ່ສູງສົ່ງຂອງແມ່ນໍ້າ ອາກໂນນ.
[29]ວິບັດຈົ່ງມີແກ່ເຈົ້າ, ໂມອາບ! ເຈົ້າໄດ້ຈິບຫາຍແລ້ວ, ຄົນຂອງພະເຄໂມດ.
ເຂົາໄດ້ເຮັດໃຫ້ບັນດາລູກຊາຍຂອງເຂົາເປັນຜູ້ລີ້ໄພແລະບັນດາລູກສາວຂອງເຂົາເປັນນັກໂທດຂອງສີໂຫນກະສັດຂອງຄົນອາໂມຣິດ.
[30]ແຕ່ເຮົາໄດ້ຊະນະເຫນືອສີໂຫນ. ເຮັດຊະໂບນໄດ້ຖືກທຳລາຍລ້າງໄປຕະຫລອດທາງຈົນເຖິງດີໂບນ. ເຮົາໄດ້ຊະນະພວກເຂົາຕະຫລອດທາງ
ຈົນເຖິງເມືອງໂນຟາ, ທີ່ໄປຈົນເຖິງ ເມເດບາ.”
[31]ດັ່ງນັ້ນ ຄົນອິດສະຣາເອນ ກໍເລີ່ມອາໄສຢູ່ໃນດິນແດນຂອງຊາວອາໂມຣິດ ຕະຫລອດມາ.[32]ແລ້ວໂມເຊຈຶ່ງສົ່ງຄົນອອກໄປເບິ່ງຊ່ອງທາງທີ່ເມືອງ
ຢາເສ. ພວກເຂົາຈຶ່ງຍຶດຫມູ່ບ້ານຂອງເມືອງນັ້ນ ແລະ ໄດ້ຂັບໄລ່ຊາວອາໂມຣິດທີ່ອາໄສຢູ່ທີ່ນັ້ນອອກໄປ.
[33]ແລ້ວພວກເຂົາ ກໍລ້ຽວໄປແລະຂຶ້ນໄປ ຕາມທາງໄປເມືອງບາຊານ. ໂອກ ກະສັດ ແຫ່ງບາຊານ ກໍໄດ້ອອກມາສູ້ຮົບກັບພວກເຂົາ,
ເຂົາແລະກອງທັບເຂົາມາ, ເພື່ອສູ້ຮົບກັບຄົນອິດສະຣາເອນທີ່ ເອັດເຣອີ.[34]ແລ້ວພຣະຢາເວໄດ້ບອກກັບໂມເຊວ່າ, “ຢ່າສູ່ຢ້ານເລີຍ,

 generated on Tue Jun 17 19:01:42 2025

ເພາະເຮົາໄດ້ໃຫ້ເຈົ້າຕີຊະນະເຫນືອເຂົາ, ກອງທັບທັງຂອງເຂົາ, ແລະ ດິນແດນຂອງເຂົາ. ຈົ່ງເຮັດກັບເຂົາເຫມືອນຢ່າງທີ່ເຈົ້າເຮັດກັບສີໂຫນ
ກະສັດຂອງຊາວອາໂມຣິດ, ທີ່ໄດ້ອາໄສຢູ່ທີ່ເມືອງເຮັດຊະໂບນ."
35 ດັ່ງນັ້ນ ພວກເຂົາກໍໄດ້ສັງຫານສີໂຫນ ພ້ອມທັງລູກຊາຍ ຂອງເຂົາ,
ແລະກອງທັບຂອງເຂົາ, ປະຊາຊົນທັງຫມົດຂອງເຂົາ ໂດຍບໍ່ມີໃຜລອດຊີວິດເລີຍ. ແລ້ວພວກເຂົາກໍຍຶດດິນແດນມາປົກຄອງ.

22 [1]ຊາວອິດສະຣາເອນໄດ້ອອກເດີນທາງຕໍ່ໄປ ຈົນວ່າພວກເຂົາໄດ້ຕັ້ງຄ້າຍພັກຕາມທົ່ງຮາບພຽງຂອງໂມອາບໃກ້ກັບເມືອງເຢຣີໂກ,
ທີ່ຢູ່ອີກຟາກຫນຶ່ງຂອງແມ່ນ້ຳຈໍແດນຈາກເມືອງນັ້ນ.

[2]ບາຫລາກລູກຊາຍຂອງຊິບໂປ ໄດ້ເຫັນທຸກສິ່ງທີ່ຊາວອິດສະຣາເອນ ໄດ້ເຮັດກັບຊາວອາໂມຣິດ.
[3]ຊາວໂມອາບຈຶ່ງຢ້ານຄົນເຫລົ່ານັ້ນຫລາຍເພາະພວກເຂົາມີຈຳນວນຫລວງຫລາຍ,
ແລະຊາວໂມອາບກໍຢູ່ໃນຄວາມຢ້ານກົວຕໍ່ຄົນອິດສະຣາເອນ.[4]ກະສັດແຫ່ງໂມອາບ ໄດ້ເວົ້າຕໍ່ ພວກຜູ້ອາວຸໂສຂອງຄົນມີດີອານວ່າ, “
ຄົນຫລວງຫລາຍເຫລົ່ານີ້ຈະກິນທັງຫມົດສິ່ງທີ່ ຢູ່ອ້ອມຮອບພວກເຮົາ ເຫມືອນດັ່ງງົວກິນຫຍ້າຢູ່ຕາມທົ່ງນາ.”
ບັດນີ້ບາຫລາກລູກຊາຍຂອງຊິບໂປເປັນກະສັດແຫ່ງໂມອາບໃນເວລານັ້ນ.
[5]ເຂົາໄດ້ສົ່ງພວກຜູ້ສົ່ງຂ່າວສານໄປເຊີນ ບາລາອາມ ລູກຊາຍຂອງເບໂອ, ທີ່ເມືອງ ເປໂທທີ່ຢູ່ໃກ້ກັບແມ່ນໍ້າເອີຟຣັດ,
ໃນດິນແດນຂອງຊົນຊາດຂອງພວກເຂົາແລະປະຊາຊົນຂອງເຂົາ. ເຂົາໄດ້ເອີ້ນຄົນນັ້ນມາແລະກ່າວວ່າ," ເບິ່ງແມ,
ມີຊົນຊາດຫນຶ່ງທີ່ມາຈາກເອຢິບຢູ່ທີ່ນີ້. ພວກເຂົາໄດ້ແຜ່ຜາຍໄປທົ່ວທຸກແຫ່ງ ແລະ ພວກເຂົາຢູ່ຕິດກັບພວກເຮົາໃນຕອນນີ້.[6]ດັ່ງນັ້ນ
ຂໍໂຜດມາດຽວນີ້ເຖີດແລະສາບແຊ່ງຊົນຊາດນີ້ໃຫ້ກັບພວກເຮົາ. ເພາະພວກເຂົາມີກຳລັງຫລາຍເກີນໄປສຳລັບພວກເຮົາ.
ແລ້ວບາງທີພວກເຮົາອາດຈະຈັດການເພື່ອໂຈມຕີ ພວກເຂົາໄດ້ ແລະ ໄລ່ພວກເຂົາໃຫ້ອອກໄປຈາກ ດິນແດນນີ້. ເຮົາຮູ້ວ່າທ່ານກ່າວຄຳອວຍພອນ
ຜູ້ໃດກໍຕາມກໍຈະໄດ້ຮັບພອນ, ແລະ ທ່ານກ່າວຄຳສາບແຊ່ງຜູ້ໃດກໍຕາມ ເຂົາຈະໄດ້ຮັບຄຳສາບແຊ່ງ.”
[7]ດັ່ງນັ້ນ ບັນດາຜູ້ນຳຂອງຊາວໂມອາບ ແລະ ພວກຜູ້ນຳຂອງຊາວມີດີອານ, ຈຶ່ງອອກໄປແລະເອົາຄ່າຕອບແທນສຳລັບຄຳທຳນວາຍໄປດ້ວຍ.
ພວກເຂົາກໍມາຫາບາລາອາມ ແລະໄດ້ບອກຄຳເວົ້າ ຂອງບາຫລາກໃຫ້ແກ່ເພິ່ນ.[8]ບາລາອາມ ຈຶ່ງເວົ້າກັບພວກເຂົາວ່າ," ຈົ່ງຢູ່ທີ່ນີ້ຄືນນີ້ເຖີດ
ຂ້ອຍຈະນຳຄຳທີ່ພຣະຢາເວໄດ້ບອກກັບຂ້ອຍໃນຄືນນີ້." ດັ່ງນັ້ນ ພວກຜູ້ນຳຂອງຊາວໂມອາບຈຶ່ງພັກຢູ່ ທີ່ນັ້ນກັບບາລາອາມໃນຄືນນັ້ນ.
[9]ພຣະເຈົ້າໄດ້ມາຫາ ບາລາອາມ ແລະ ຖາມລາວວ່າ, “ຄົນເຫລົ່ານີ້ ທີ່ມາພັກນຳເຈົ້າ ນັ້ນແມ່ນໃຜ?”[10]ບາລາອາມ ຈຶ່ງຕອບພຣະເຈົ້າວ່າ,
“ບາຫລາກລູກຊາຍຂອງຊິບໂປ, ກະສັດແຫ່ງໂມອາບ, ໄດ້ສົ່ງຄົນພວກເຂົາມາຫາຂ້ານ້ອຍ. ເຂົາບອກວ່າ,[11]ເບິ່ງແມ, ມີປະຊາຊົນທີ່ອອກມາຈາກ
ເອຢິບ ໄດ້ແຜ່ຄຸມພື້ນທີ່ດິນຂອງເຮົາ. ດຽວນີ້ຂໍໃຫ້ມາ ສາບແຊ່ງພວກເຂົາໃຫ້ກັບເຮົາ. ບາງທີເຮົາຈະຈັດການ
ເພື່ອສູ້ຮົບກັບພວກເຂົາໄດ້ແລະຂັບໄລ່ພວກເຂົາອອກໄປໄດ້.”'
[12]ພຣະເຈົ້າໄດ້ບອກບາລາອາມ ວ່າ, “ເຈົ້າຢ່າໄປກັບຄົນເຫລົ່ານັ້ນ. ເຈົ້າຢ່າສາບແຊ່ງຄົນອິດສະຣາເອນ
ເພາະພວກເຂົາເປັນຄົນທີ່ໄດ້ຮັບຄຳອວຍພອນ.”[13]ບາລາອາມລຸກຂຶ້ນໃນຕອນເຊົ້າ ແລະບອກກັບພວກຜູ້ນຳຂອງ ບາຫລາກວ່າ,"
ຈົ່ງກັບໄປຍັງດິນແດນຂອງພວກທ່ານເຖີດເພາະພຣະຢາເວຊົງປະຕິເສດທີ່ຈະໃຫ້ຂ້ອຍໄປ ກັບພວກເຈົ້າ."[14]ດັ່ງນັ້ນ
ພວກຜູ້ນຳຂອງຄົນໂມອາບຈຶ່ງຈາກໄປ ແລະກັບຄືນໄປຫາບາຫລາກ. ພວກເຂົາບອກເພິ່ນວ່າ," ບາລາອາມ ປະຕິເສດທີ່ຈະມາກັບພວກຕົນ."
[15]ບາຫລາກໄດ້ສົ່ງບັນດາ ຜູ້ນຳໄປອີກຄັ້ງຫນຶ່ງຊຶ່ງມີຈຳນວນຫລາຍກວ່າເປັນຄົນສຳຄັນກວ່າພວກທຳອິດ.[16]ພວກເຂົາໄດ້ມາຫາ
ບາລາອາມແລະບອກເຂົາວ່າ," ບາຫລາກລູກຊາຍຂອງຊິບໂປກ່າວດັ່ງນີ້ວ່າ: “ຂໍຢ່າໃຫ້ສິ່ງໃດ ສິ່ງຫນຶ່ງກີດຂວາງທ່ານຈາກການມາຫາເຮົາ,
[17]ເພາະເຮົາຈະຈ່າຍໃຫ້ແກ່ທ່ານຢ່າງງາມແລະໃຫ້ກຽດແກ່ທ່ານຢ່າງສູງ, ແລະ ເຮົາຈະເຮັດຕາມສິ່ງທີ່ທ່ານບອກໃຫ້ເຮົາເຮັດ.
ດັ່ງນັ້ນຂໍກະລຸນາມາເຖີດແລະສາບແຊ່ງ ຊົນຊາດນີ້ໃຫ້ກັບເຮົາ.”'
[18]ບາລາອາມ ໄດ້ຕອບແລະກ່າວກັບຄົນບາຫລາກ," ເຖິງແມ່ນວ່າບາຫລາກຈະມອບຣາຊວັງຂອງເພິ່ນທີ່ເຕັມໄປດ້ວຍເງິນແລະຄຳໃຫ້ກັບຂ້ານ້ອຍ,
ຂ້ານ້ອຍກໍບໍ່ສາມາດຝ່າຝືນຄຳສັ່ງຂອງພຣະຢາເວ, ພຣະເຈົ້າຂອງຂ້ານ້ອຍ,
ແລະສາມາດເຮັດນ້ອຍຫລືຫລາຍກ່ວາທີ່ພຣະອົງຊົງບອກຂ້ານ້ອຍໄດ້.[19]ແລ້ວຕອນນີ້, ຂໍໃຫ້ຄອຍທີ່ນີ້ຄືນນີ້ດ້ວຍ,
ເພື່ອທີ່ຂ້ານ້ອຍຈະຮູ້ວ່າພຣະຢາເວ ຈະຊົງບອກອັນໃດ ຂ້ານ້ອຍໃຫ້ຮູ້ຕື່ມກໍໄດ້.”[20]ພຣະເຈົ້າໄດ້ມາຫາ ບາລາອາມໃນຕອນກາງຄືນ ແລະ
ບອກກັບເຂົາວ່າ,“ເນື່ອງຈາກພວກຄົນເຫລົ່ານີ້ ມາຂໍຮ້ອງເຈົ້າ, ໃຫ້ໄປກັບພວກເຂົາ ຈົ່ງຕື່ນຂຶ້ນແລ້ວໄປກັບພວກເຂົາສາ.
ແຕ່ຈົ່ງເຮັດຕາມສິ່ງທີ່ເຮົາໄດ້ບອກເຈົ້າໃຫ້ເຮັດ ເທົ່ານັ້ນ.”
[21]ບາລາອາມຕື່ນຂຶ້ນໃນຕອນເຊົ້າ, ຜູກລໍຂອງເຂົາ, ແລະ ອອກ ເດີນທາງໄປກັບພວກຜູ້ນຳຊາວໂມອາບ.[22]ແຕ່ເພາະເຫດທີ່ເຂົາໄປ,
ຄວາມໂກດຮ້າຍຂອງພຣະເຈົ້າໄດ້ພຸ່ງຂຶ້ນ. ເທວະດາຂອງພຣະຢາເວກໍມາຢືນຂວາງຢູ່ໃນຫົນທາງນັ້ນເປັນເຫມືອນຄົນທີ່ເປັນສັດຕູຕໍ່ບາລາອາມ,
ທີ່ກຳລັງຂີ່ລໍຂອງເຂົາ. ຄົນຮັບໃຊ້ສອງຄົນຂອງບາລາອາມກໍຢູ່ກັບເຂົາດ້ວຍ.[23]ເມື່ອໂຕລໍ
ໄດ້ເຫັນເທວະດາຂອງພຣະຢາເວທີ່ຊັກດາບອອກມາຢູ່ໃນມືຂອງເຂົາກຳລັງຢືນຢູ່ໃນຫົນທາງນັ້ນ. ລໍໂຕນັ້ນກໍແລ່ນອອກ
ຈາກທາງແລະເຂົ້າໄປສູ່ທົ່ງນາ. ບາລາອາມ ຈຶ່ງຕີລໍໂຕນັ້ນ ຂະຫນາບມັນໃຫ້ກັບຄືນມາສູ່ຫົນທາງໃຫຍ່.
[24]ແລ້ວເທວະດາຂອງພຣະຢາເວ ກໍມາຢືນຢູ່ໃນທາງແຄບຂອງຫົນທາງລະຫວ່າງສວນອະງຸ່ນ,
ຊຶ່ງມີກຳແພງຫີນຢູ່ດ້ານຂວາຂອງເຂົາແລະກຳແພງອີກດ້ານຫນຶ່ງຢູ່ທາງຊ້າຍຂອງເຂົາ.[25]ເມື່ອໂຕລໍໄດ້ເຫັນເທວະດາຂອງພຣະຢາເວອີກ.
ມັນຈຶ່ງໄປຕຳກຳແພງ ແລະ ເຮັດໃຫ້ຕີນຂອງບາລາອາມບຽດກັບຝາຫີນ. ບາລາອາມ ຈຶ່ງຕີລໍອີກ.
[26]ເທວະດາຂອງພຣະຢາເວໄດ້ໄປລ່ວງຫນ້າກ່ອນ ແລະ ຢືນຢູ່ໃນທາງແຄບອີກແຫ່ງຫນຶ່ງ ທີ່ແຕ່ລະດ້ານບໍ່ມີທາງທີ່ຈະຜ່ານໄປ.
[27]ເມື່ອລໍໂຕນັ້ນຫລຽວເຫັນເທວະດາຂອງພຣະຢາເວ, ແລະ ມັນກໍຫມູບລົງຂ້າງໃຕ້ບາລາອາມ. ບາລາອາມເກີດໃຈຮ້າຍຂຶ້ນມາ,
ແລະເຂົາກໍຕີລໍໂຕນັ້ນດ້ວຍໄມ້ເທົ້າຂອງເຂົາ.
[28]ແລ້ພຣະຢາເວກໍຊົງເປີດປາກລໍໂຕນັ້ນ ມັນກໍປາກໄດ້. ມັນເວົ້າຕໍ່ບາລາອາມ ວ່າ, “ຂ້ອຍ ເຮັດຫຍັງໃຫ້ເຈົ້າແດ່?
ເປັນຫຍັງເຈົ້າຈຶ່ງຕີຂ້ອຍເຖິງສາມເທື່ອເຊັ່ນນີ້?”[29]ບາລາອາມ ຕອບລໍວ່າ, “ກໍຍ້ອນເຈົ້າທຳທ່າເຮັດໃຫ້ຂ້ອຍ. ຂ້ອຍຢາກມີດາບຢູ່ໃນມືຂອງຂ້ອຍ.
ຖ້າຫາກມີຂ້ອຍຈະຂ້າເຈົ້າເສຍດຽວນີ້.”[30]ໂຕລໍຈຶ່ງກ່າວກັບບາລາອາມວ່າ, “ຂ້ອຍບໍ່ແມ່ນລໍ ໂຕທີ່ເຈົ້າເຄີຍຂີ່ໄປມາຊົ່ວຊີວິດນັ້ນບໍ?
ຂ້ອຍເຄີຍໄດ້ເຮັດກັບເຈົ້າແບບນີ້ມາກ່ອນຫລືບໍ່?” ບາລາອາມ ຕອບວ່າ, “ບໍ່.”
[31]ແລ້ວພຣະຢາເວ ຈຶ່ງເປີດຕາບາລາອາມ, ແລະເພິ່ນກໍໄດ້ເຫັນເທວະດາຂອງພຣະຢາເວທີ່ຊັກດາບຢູ່ໃນມືຂອງເຂົາຢືນຂວາງໃນຫົນທາງຢູ່.
ບາລາອາມ ຈຶ່ງກົ້ມຫົວຂອງເຂົາແລະຫມູບຫນ້າລົງດິນ.[32]ເທວະດາ ຂອງພຣະຢາເວໄດ້ກ່າວກັບເຂົາວ່າ, “ເປັນຫຍັງ ເຈົ້າຈຶ່ງຕີລໍ

 generated on Tue Jun 17 19:01:42 2025

ຂອງເຈົ້າເຖິງສາມເທື່ອເຊັ່ນນີ້? ເບິ່ງແມ, ເຮົາໄດ້ມາເປັນຄົນຫນຶ່ງທີ່ເປັນສັດຕູຕໍ່ເຈົ້າ ເພາະການກະທຳຂອງເຈົ້າຊົ່ວຮ້າຍຕໍ່ຫນ້າເຮົາ.
[33]ລໍໂຕນັ້ນໄດ້ເຫັນເຮົາ ຈຶ່ງຫັນຫນີອອກໄປເຖິງສາມເທື່ອ. ຖ້າມັນບໍ່ຫັນໄປຈາກເຮົາ, ເຮົາຄົງໄດ້ຂ້າເຈົ້າຢ່າງແນ່ນອນແລະ ໄວ້ຊີວິດຂອງມັນ."
[34]ບາລາອາມ ຈຶ່ງເວົ້າກັບເທວະດາຂອງພຣະຢາເວວ່າ, "ຂ້ານ້ອຍເຮັດບາບແລ້ວ. ຂ້ານ້ອຍບໍ່ຮູ້ວ່າທ່ານຢືນຂວາງກັ້ນຂ້ານ້ອຍໄວ້ໃນຫົນທາງນັ້ນ.
ດັ່ງນັ້ນ, ຖ້າເປັນການເຮັດໃຫ້ທ່ານບໍ່ພໍໃຈ, ຂ້ານ້ອຍນັ້ນຈະກັບຄືນເມືອດຽວນີ້."[35]ແຕ່ເທວະດາຂອງພຣະຢາເວບອກບາລາອາມວ່າ, "ຈົ່ງໄປ
ກັບຄົນເຫລົ່ານັ້ນຕໍ່ໄປ. ແຕ່ເຈົ້າຕ້ອງເວົ້າສະເພາະຄຳທີ່ເຮົາບອກເຈົ້າກ່າວເທົ່ານັ້ນ." ດັ່ງນັ້ນ ບາລາອາມ
ຈຶ່ງເດີນທາງຕໍ່ໄປກັບພວກຜູ້ນຳຂອງບາຫລາກ.
[36]ເມື່ອເຈົ້າບາຫລາກ ໄດ້ຍິນວ່າ ບາລາອາມໄດ້ມາແລ້ວ, ເພິ່ນກໍຮີບເດີນທາງອອກໄປພົບລາວ ທີ່ເມືອງໃນໂມອາບທີ່ແມ່ນ້ຳ ອາໂນນ,
ທີ່ກັ້ນຊາຍແດນ.[37]ເຈົ້າບາຫລາກ ໄດ້ກ່າວກັບບາລາອາມວ່າ, "ເຮົາບໍ່ໄດ້ສົ່ງຄົນໄປຫາເຈົ້າເພື່ອເຊີນໃຫ້ເຈົ້າມາບໍ່? ເປັນຫຍັງເຈົ້າຈຶ່ງບໍ່ມາຫາເຮົາ?
ເຈົ້າຄິດວ່າ, ເຮົາບໍ່ສາມາດໃຫ້ກຽດເຈົ້າໄດ້ບໍ່?"
[38]ແລ້ວບາລາອາມ ຈຶ່ງຕອບບາຫລາກ, ກ່າວວ່າ, " ຂ້ານ້ອຍມາຫາທ່ານແລ້ວ. ບັດນີ້ ຂ້ານ້ອຍຈະມີອຳນາດເຮັດຫຍັງໄດ້ແດ່?
ຂ້ານ້ອຍເວົ້າໄດ້ພຽງແຕ່ຖ້ອຍຄຳທີ່ພຣະເຈົ້າໄດ້ຊົງໃສ່ໄວ້ໃນປາກຂອງຂ້ານ້ອຍເທົ່ານັ້ນ."[39]ບາລາອາມ ຈຶ່ງໄປກັບເຈົ້າບາຫລາກ,
ແລະພວກເພິ່ນກໍໄປເຖິງກີຣິອາດຮູຊິດ.[40]ແລ້ວເຈົ້າບາຫລາກ ໄດ້ຖວາຍງົວ ແລະ ແກະເປັນເຄື່ອງບູຊາ ແລະໃຫ້ຊີ້ນບາງສ່ວນໃຫ້ບາລາອາມ ແລະ
ພວກຜູ້ນຳທີ່ໄດ້ໄປກັບຕົນ.
[41]ໃນຕອນເຊົ້າ, ເຈົ້າບາຫລາກໄດ້ພາ ບາລາອາມ ຂຶ້ນໄປເທິງທີ່ສູງບາອານ. ຈາກບ່ອນນັ້ນ ບາລາອາມ ກໍສາມາດຫລຽວ
ເຫັນຄົນອິດສະຣາເອນທີ່ຢູ່ໃນຄ້າຍຂອງພວກເຂົາໄດ້ພຽງສ່ວນຫນຶ່ງເທົ່ານັ້ນ.

# 23

[1]ບາລາອາມໄດ້ເວົ້າກັບເຈົ້າບາຫລາກວ່າ, “ຂໍຈົ່ງສ້າງແທ່ນບູຊາຂຶ້ນເຈັດແທ່ນໃຫ້ຂ້ານ້ອຍທີ່ນີ້ ແລະ ຈັດຕຽມງົວຜູ້ເຈັດໂຕ ແລະ ແກະຜູ້
ເຈັດໂຕ."[2]ດັ່ງນັ້ນເຈົ້າບາຫລາກກໍເຮັດຕາມທີ່ບາລາອາມໄດ້ຂໍມາແລ້ວບາຫລາກກັບບາລາອາມກໍໄດ້ຖວາຍງົວຜູ້ຫນຶ່ງໂຕ ແລະ
ແກະຜູ້ຫນຶ່ງໂຕເປັນເຄື່ອງບູຊາເທິງແທ່ນບູຊາແຕ່ລະອັນ.[3]ແລ້ວບາລາອາມກໍໄດ້ກ່າວແກ່ເຈົ້າບາຫລາກວ່າ, “ຈົ່ງຢືນຢູ່ໃກ້ກັບແທ່ນບູຊາຂອງທ່ານ
ແລະ ຂ້ານ້ອຍຈະໄປ. ບາງທີພຣະຢາເວຈະຊົງມາພົບຂ້ານ້ອຍ. ອັນໃດກໍຕາມທີ່ພຣະອົງຊົງສຳແດງແກ່ຂ້ານ້ອຍ ຂ້ານອ້ຍຈະມາບອກທ່ານ."
ດັ່ງນັ້ນເຂົາຈຶ່ງອອກໄປ ຍັງຈອມພູທີ່ບໍ່ມີຕົ້ນໄມ້ເລີຍ.

[4]ຂະນະທີ່ເຂົາຢູ່ເທິງຈອມພູນັ້ນ, ພຣະເຈົ້າກໍມາພົບເຂົາ, ແລະບາລາອາມກໍໄດ້ກ່າວຕໍ່ພຣະອົງວ່າ, “ຂ້ານ້ອຍໄດ້ສ້າງແທ່ນບູຊາ ເຈັດແທ່ນ ແລະ
ຂ້ານ້ອຍກໍໄດ້ຖວາຍງົວຜູ້ຫນຶ່ງໂຕແລະແກະຜູ້ຫນຶ່ງໂຕເທິງແຕ່ລະແທ່ນແລ້ວ.”[5]ພຣະຢາເວໄດ້ຊົງໃສ່ຖ້ອຍຄຳໃນປາກບາລາອາມແລະກ່າວກັບເຂົາວ່າ,"
ຈົ່ງກັບຄືນໄປຫາບາຫລາກ ແລະ ເວົ້າກັບເຂົາ."[6]ດັ່ງນັ້ນ ບາລາອາມຈຶ່ງກັບມາຫາບາຫລາກ, ທີ່
ກຳລັງຢືນຢູ່ໃກ້ແທ່ນຖວາຍເຄື່ອງເຜົາບູຊາຂອງເຂົາ, ແລະພວກຜູ້ນຳຄົນໂມອາບ ທຸກຄົນທີ່ຢູ່ກັບເຂົາ.
[7]ແລ້ວບາລາອາມ ໄດ້ເລີ່ມກ່າວຄຳທຳນວາຍຂອງເຂົາ ແລະ ກ່າວວ່າ, “ບາຫລາກໄດ້ພາຂ້ອຍມາຈາກເມືອງອາຣາມ,
ກະສັດແຫ່ງໂມອາບຈາກພູດອຍທາງທິດຕາເວັນອອກ. 'ມາເຖີດ, ຈົ່ງສາບແຊ່ງຢາໂຄບເພື່ອເຮົາ,'
ເຂົາກ່າວວ່າ.'ມາເຖີດມາຕໍ່ສູ້ກັບອິດສະຣາເອນ.'[8]ຂ້ອຍຈະສາບແຊ່ງຄົນເຫລົ່ານັ້ນທີ່ພຣະເຈົ້າ ບໍ່ໄດ້ຊົງສາບແຊ່ງໄດ້ຢ່າງໃດ?
ຂ້ອຍຈະສູ້ຮົບກັບຄົນເຫລົ່ານັ້ນທີ່ພຣະຢາເວບໍ່ໄດ້ຊົງສູ້ຮົບໄດ້ຢ່າງໃດ?
[9]ເພາະຈາກຍອດໂງ່ນຫີນນັ້ນຂ້ອຍຫລຽວເຫັນພວກເຂົາ; ຈາກເນີນພູເຫລົ່ານັ້ນຂ້ອຍ ເຝົ້າເບິ່ງພວກເຂົາ. ເບິ່ງແມ,
ມີຊົນຊາດຫນຶ່ງທີ່ອາໄສຢູ່ຕາມລຳພັງແລະບໍ່ຖືວ່າພວກເຂົາພວກເຂົາເອງເປັນພຽງຊົນຊາດທຳມະດາ.
[10]ໃຜຈະນັບຈຳນວນເຊື້ອສາຍຂອງຢາໂຄບທີ່ມີຫລວງຫລາຍ ດັ່ງຂີ້ຝຸ່ນດິນຫລືນັບຈຳນວນພຽງແຕ່ຫນຶ່ງໃນສີ່ຂອງອິດສະຣາເອນໄດ້?
ຂໍໃຫ້ຂ້ອຍຕາຍຢ່າງຄວາມຕາຍຂອງຄົນຊອບທຳ, ແລະຂໍໃຫ້ບັ້ນປາຍຊີວິດຂ້ອຍເປັນເຫມືອນດັ່ງຄົນຊອບທຳ ""
[11]ບາຫລາກ ກໍເວົ້າຕໍ່ ບາລາອາມ ວ່າ, “ ເຈົ້າໄດ້ເຮັດອັນໃດເພື່ອເຮົາ? ເຮົາພາເຈົ້າສາບແຊ່ງສັດຕູຂອງເຮົາ, ແຕ່ເບິ່ງແມ,
ເຈົ້າກັບມາອວຍພອນພວກເຂົາແທນ.”[12]ບາລາອາມຈຶ່ງຕອບວ່າ, “ຂ້ອຍຈະບໍ່ລະວັງທີ່ຈະເວົ້າຄຳທີ່ພຣະຢາເວໄດ້ຊົງໃສ່ໄວ້ໃນປາກຂ້ອຍໄດ້ບໍ?
[13]ດັ່ງນັ້ນບາຫລາກຈຶ່ງບອກເຂົາວ່າ, “ຂໍໂຜດມາກັບເຮົາຢູ່ໃນບ່ອນຫນຶ່ງເຖີດ. ທີ່ຊຶ່ງເຈົ້າສາມາດຫລຽວເຫັນສ່ວນທີ່ຢູ່ໃກ້ທີ່ສຸດຂອງພວກເຂົາ,
ບໍ່ແມ່ນທັງຫມົດຂອງພວກເຂົາທີ່ນັ້ນ. ເຈົ້າຈະສາບແຊ່ງພວກເຂົາເພື່ອເຮົາ.”[14]ດັ່ງນັ້ນເຂົາຈຶ່ງພາບາລາອາມເຂົ້າໄປຍັງທົ່ງນາຂອງໂຊພິມ,
ທີ່ເທິງພູປີສະກາ, ແລະສ້າງແທ່ນບູຊາອີກເຈັດແທ່ນ. ເຂົາຖວາຍງົວຜູ້ຫນຶ່ງໂຕ ແລະແກະຜູ້ຫນຶ່ງໂຕເທິງແຕ່ລະແທ່ນບູຊາ.[15]ແລ້ວບາລາອາມ ໄດ້
ເວົ້າກັບບາຫລາກ ວ່າ, “ຂໍຈົ່ງຢືນຢູ່ໃກ້ກັບແທ່ນເຜົາບູຊາຂອງທ່ານທີ່ນີ້ເຖີດ, ສ່ວນຂ້ອຍນັ້ນຈະໄປພົບພຣະຢາເວຢູ່ທີ່ອື່ນ.”
[16]ດັ່ງນັ້ນພຣະຢາເວຈຶ່ງຊົງມາພົບກັບບາລາອາມ ແລະ ຊົງໃສ່ຖ້ອຍຄຳໃນປາກຂອງເຂົາ. ພຣະອົງກ່າວວ່າ,"
ຈົ່ງກັບໄປຫາບາຫລາກແລະບອກຖ້ອຍຄຳຂອງເຮົາແກ່ເຂົາ.[17]ບາລາອາມໄດ້ກັບຄືນມາຫາບາຫລາກ, ແລະເຫັນເຂົາ,
ຢືນຢູ່ໃກ້ແທ່ນຖວາຍເຄື່ອງເຜົາບູຊາຂອງເຂົາ, ແລະພວກຜູ້ນຳຂອງຊາວໂມອາບກໍຢູ່ກັບເຂົາ. ແລ້ວບາຫລາກກໍເວົ້າກັບເຂົາວ່າ,
"ພຣະຢາເວໄດ້ກ່າວຢ່າງໃດ?"[18]ບາລາອາມຈຶ່ງເລີ່ມກ່າວຄຳທຳນວາຍຂອງເຂົາ. ເຂົາກ່າວວ່າ, “ ບາຫລາກ ຈົ່ງລຸກຂຶ້ນ, ແລະຟັງ. ຈົ່ງຟັງຂ້ອຍ,
ເຈົ້າຜູ້ເປັນລູກຊາຍຂອງຊິບໂປ.
[19]ພຣະເຈົ້ານັ້ນບໍ່ຄືມະນຸດ, ທີ່ພຣະອົງຈະຊົງເວົ້າຕົວະໄດ້, ຫລືບໍ່ໄດ້ເປັນມະນຸດ, ທີ່ຈະປ່ຽນພຣະໄທຂອງພຣະອົງໄດ້.
ພຣະອົງໄດ້ຊົງສັນຍາສິ່ງໃດໄວ້ແລ້ວ ຈະບໍ່ຊົງກະທຳສິ່ງນັ້ນບໍ? ເມື່ອພຣະອົງກ່າວໄວ້ແລ້ວພຣະອົງຈະບໍ່ຊົງເຮັດສິ່ງນັ້ນໃຫ້ສຳເລັດບໍ?.[20]ເບິ່ງແມ,
ຂ້ອຍໄດ້ຮັບຄຳສັ່ງໃຫ້ກ່າວຄຳອວຍພອນ. ພຣະເຈົ້າໄດ້ຊົງປະທານພຣະພອນ ແລະຂ້ອຍຈະກັບຄຳບໍ່ໄດ້.
[21]ພຣະອົງບໍ່ຊົງເຫັນຄວາມຍາກລຳບາກໃດໆໃນຢາໂຄບຫລືຄວາມທຸກຍາກໃດໆໃນອິດສະຣາເອນ. ພຣະຢາເວພຣະເຈົ້າຂອງ ພວກເຂົາ
ສະຖິດກັບພວກເຂົາ, ແລະໂຫ່ຮ້ອງຕໍ່ກະສັດຂອງພວກເຂົາ.[22]ພຣະເຈົ້າໄດ້ນຳພວກເຂົາອອກມາຈາກປະເທດເອຢິບ
ດ້ວຍພຣະກຳລັງເຫມືອນກຳລັງຂອງງົວປ່າ.
[23]ບໍ່ມີເວດມົນໃດທີ່ຕໍ່ຕ້ານຢາໂຄບໄດ້, ແລະບໍ່ມີຄຳທຳນວາຍອານາຄົດໃດທີ່ຈະທຳຮ້າຍອິດສະຣາເອນໄດ້. ແຕ່ຢາໂຄບແລະ
ອິດສະຣາເອນຕ້ອງໄດ້ຮັບຄຳກ່າວວ່າ, 'ເບິ່ງແມ! ສິ່ງທີ່ພຣະເຈົ້າ ໄດ້ເຮັດສຳລັບພວກເຂົາ!'
[24]ເບິ່ງແມ, ຊົນຊາດທີ່ລຸກຂຶ້ນມາເຫມືອນດັ່ງໂຕສິງ, ເປັນເຫມືອນກັບສິງໂຕທີ່ປາກົດໂຕແລະເຂົ້າໂຈມຕີ.
ມັນຈະບໍ່ນອນລົງຈົນກ່ວາມັນຈະໄດ້ກິນເຫຍື່ອຂອງມັນແລ້ວ. ແລະກິນເລືອດ ຈາກໂຕທີ່ມັນໄດ້ຂ້າ."
[25]ບາຫລາກ ຈຶ່ງເວົ້າກັບບາລາອາມ ວ່າ, "ຢ່າສາບແຊ່ງພວກເຂົາ ຫລືອວຍພອນພວກເຂົາເລີຍ."[26]ແຕ່ບາລາອາມ ກໍຕອບບາຫລາກ ວ່າ,
“ຂ້ອຍບໍ່ໄດ້ບອກທ່ານບໍ່ວ່າ ຂ້ອຍຕ້ອງເວົ້າທຸກສິ່ງທີ່ພຣະຢາເວ ໄດ້ບອກໃຫ້ຂ້ອຍເວົ້າ?.”[27]ດັ່ງນັ້ນບາຫລາກ ຈຶ່ງຕອບບາລາອາມວ່າ,
“ຈົ່ງມາດຽວນີ້ເຖີດ, ເຮົາຈະພາເຈົ້າໄປຍັງອີກທີ່ຫນຶ່ງ. ບາງທີອາດຈະເປັນທີ່ພໍພຣະໄທຂອງ ພຣະເຈົ້າທີ່ຈະຍອມໃຫ້ເຈົ້າ
ສາບແຊ່ງພວກເຂົາເພື່ອເຮົາ.”
[28]ດັ່ງນັ້ນບາຫລາກຈຶ່ງພາບາລາອາມ ໄປທີ່ເທິງຍອດພູເປໂອ ບ່ອນທີ່ແນມລົງມາເຫັນຖິ່ນທຸຣະກັນດານນັ້ນ.[29]ບາລາອາມ ໄດ້ເວົ້າກັບບາຫລາກ ວ່າ,
“ຂໍໃຫ້ສ້າງແທ່ນບູຊາເຈັດແທ່ນໃຫ້ຂ້ອຍທີ່ນີ້ ແລະ ຈັດຕຽມງົວຜູ້ເຈັດໂຕ ແລະ ແກະຜູ້ເຈັດໂຕມາ.”[30]ດັ່ງນັ້ນບາຫລາກ ກໍເຮັດຕາມທີ່ບາລາອາມ
ໄດ້ບອກ; ເຂົາໄດ້ຖວາຍງົວຜູ້ຫນຶ່ງໂຕ ແລະ ແກະຜູ້ຫນຶ່ງໂຕເທິງແຕ່ລະແທ່ນບູຊາ.

 generated on Tue Jun 17 19:01:42 2025

24 [1]ເມື່ອບາລາອາມໄດ້ເຫັນວ່າພຣະຢາເວຊົງພໍພຣະໄທທີ່ຈະອວຍພອນອິດສະຣາເອນ, ເຂົາຈຶ່ງບໍ່ໄປ, ເພື່ອໃຊ້ເວດມົນ, ເຫມືອນຄັ້ງອື່ນໆ.
ແຕ່ເຂົາໄດ້ອ່ວາຍຫນ້າໄປທາງຖິ່ນທຸລະກັນດານ.

[2]ເຂົາໄດ້ເງີຍຫນ້າຂຶ້ນເບິ່ງ ແລະ ເຫັນວ່າອິດສະຣາເອນ ໄດ້ຕັ້ງຄ້າຍ, ແຕ່ລະຄ້າຍໃນເຜົ່າຂອງຕົນ, ແລະພຣະວິນຍານ
ຂອງພຣະເຈົ້າໄດ້ລົງມາສະຖິດກັບເຂົາ.[3]ເຂົາໄດ້ຮັບຄຳທຳນວາຍແລະກ່າວວ່າ, “ບາລາອາມ ລູກຊາຍເບໂອຕ້ອງກ່າວ,
ຊາຍທີ່ຕາເຫັນໄດ້ຢ່າງຈະແຈ້ງ.
[4]ເຂົາເວົ້າແລະໄດ້ຍິນຖ້ອຍຄຳທັງຫລາຍຂອງພຣະເຈົ້າ. ເຂົາເຫັນນິມິດຈາກກອງຜູ້ຊົງມີຣິດອຳນາດຍິ່ງໃຫຍ່,
ຕໍ່ພຣະພັກຜູ້ທີ່ເຂົາກົ້ມກາບລົງດ້ວຍຕາທີ່ໄດ້ຖືກເປີດອອກ.[5]ຢາໂຄບ, ເອີຍບັນດາເຕັນຂອງທ່ານຊ່າງງາມແທ້ນໍ, ໂອ ຊາວອິດສະຣາເອນ ເອີຍ
ສະຖານທີ່ ທີ່ທ່ານອາໃສຢູ່!
[6]ເຫມືອນກັບຮ່ອມພູເຫລົ່ານັ້ນທີ່ແຜ່ຂະຫຍາຍອອກໄປ, ເຫມືອນສວນທັງຫລາຍ ທີ່ຢູ່ແຄມແມ່ນ້ຳ, ເຫມືອນຕົ້ນເກດສະຫນາ
ຊຶ່ງພຣະຢາເວໄດ້ຊົງປູກໄວ້, ເຫມືອນຕົ້ນສົນສີດາ ທີ່ຖືກປູກໄວ້ແຄມສາຍນ້ຳ.
[7]ນ້ຳໄຫລມາຈາກຖັງນ້ຳຂອງພວກເຂົາ, ແລະເຊື້ອສາຍຂອງພວກເຂົາອຸດົມດ້ວຍນ້ຳ. ກະສັດຂອງພວກເຂົານັ້ນ ຈະຍິ່ງໃຫຍ່ກວ່າ ເຈົ້າອາກາກ,
ແລະ ຣາຊອານາຈັກຂອງເຂົາຈະໄດ້ຮັບການຍົກຍ້ອງ.
[8]ພຣະເຈົ້າໄດ້ຊົງນຳພວກເຂົາອອກມາຈາກ ເອຢິບ, ດ້ວຍພຣະກຳລັງ ດັ່ງກຳລັງຂອງງົວປ່າ. ພວກເຂົາຈະກິນບັນດາປະຊາຊາດທີ່ຕໍ່ສູ້ກັບເຂົາ.
ເຂົາຈະຫັກກະດູກຂອງພວກເຂົາເປັນທ່ອນໆ. ເຂົາຈະຍິງພວກເຂົາດ້ວຍທະນູຂອງເຂົາ.
[9]ເຂົາຫມອບລົງເຫມືອນໂຕສິງ, ດັ່ງນາງສິງ. ໃຜຈະກ້າລົບກວນເຂົາ? ຂໍໃຫ້ທຸກຄົນທີ່ອວຍພອນເຂົາໄດ້ຮັບຄຳອວຍພອນ;
ຂໍໃຫ້ທຸກຄົນທີ່ສາບແຊ່ງເຂົາໄດ້ຮັບການສາບແຊ່ງ.”
[10]ຄວາມໂກດຮ້າຍຂອງບາຫລາກ ກໍໄດ້ພຸ່ງຂຶ້ນຕໍ່ບາລາອາມ ແລະ ເຂົາກໍຕົບມືຂອງເຂົາດ້ວຍຄວາມໂກດຮ້າຍ. ບາຫລາກເວົ້າກັບບາລາອາມວ່າ,
“ເຮົາໄດ້ເຊີນເຈົ້າມາ ເພື່ອໃຫ້ສາບແຊ່ງສັດຕູຂອງເຮົາ, ແຕ່ເບິ່ງແມ, ເຈົ້າໄດ້ອວຍພອນພວກເຂົາ ເຖິງສາມເທື່ອແລ້ວ.
[11]ດັ່ງນັ້ນຈົ່ງໄປຈາກເຮົາແລະ ກັບເມືອເຮືອນຂອງທ່ານດຽວນີ້. ເຮົາສັນຍາວ່າຈະໃຫ້ລາງວັນຢ່າງງາມແກ່ເຈົ້າ, ແຕ່ພຣະຢາເວໄດ້ຊົງກີດກັ້ນເຈົ້າບໍ່
ໃຫ້ໄດ້ຮັບລາງວັນໃດໆ.”
[12]ແລ້ວບາລາອາມ ກໍໄດ້ຕອບບາຫລາກ ວ່າ, “ຂ້ອຍໄດ້ບອກກັບຜູ້ສົ່ງຂ່າວສານທີ່ເຈົ້າໄດ້ສົ່ງໄປ ຫາຂ້ອຍແລ້ວວ່າ[13]ເຖິງແມ່ນວ່າບາຫລາກ
ຈະມອບວັງຂອງເຂົາທີ່ເຕັມດ້ວຍເງິນແລະຄຳ, ໃຫ້ຂ້ອຍ ຂ້ອຍກໍບໍ່ອາດຝ່າຝືນຄຳສັ່ງຂອງພຣະຢາເວ ແລະສິ່ງທີ່ຮ້າຍຫລືດີ,
ຫລືສິ່ງໃດທີ່ຂ້ອຍຕ້ອງການຈະເຮັດ. ຂ້ອຍເວົ້າໄດ້ສະເພາະຄຳທີ່ພຣະຢາເວຊົງບອກໃຫ້ຂ້ອຍເວົ້າເທົ່ານັ້ນ.' ຂ້ອຍບໍ່ໄດ້ເວົ້າດັ່ງນີ້ກັບພວກເຂົາບໍ?
[14]ດັ່ງນັ້ນຕອນນີ້, ເບິ່ງແມ, ຂ້ອຍຈະກັບຄືນໄປຍັງຊົນຊາດຂອງຂ້ອຍ, ແຕ່ຂໍເຕືອນທ່ານກ່ອນວ່າ ຊົນຊາດນີ້
ຈະເຮັດສິ່ງໃດຕໍ່ປະຊາຊົນຂອງທ່ານໃນອີກບໍ່ທໍ່ໃດວັນຂ້າງຫນ້າ.”
[15]ບາລາອາມໄດ້ເລີ່ມກ່າວຄຳທຳນວາຍດັ່ງນີ້. ເຂົາກ່າວວ່າ," ບາລາອາມ ລູກຊາຍ ເບໂອໄດ້ກ່າວ, ຊາຍທີ່ມີຕາເບິ່ງເຫັນໄດ້ ຢ່າງຈະແຈ້ງ.
[16]ນີ້ເປັນຄຳທຳນວຍຂອງຄົນທີ່ໄດ້ຍິນຖ້ອຍຄຳຈາກພຣະເຈົ້າ, ຜູ້ທີ່ມີຄວາມຮູ້ ມາຈາກອົງສູງສຸດ, ຜູ້ທີ່ມີນິມິດຈາກອົງຜູ້ມີຣິດອຳນາດ
ຍິ່ງໃຫຍ່ຕໍ່ພຣະພັກຜູ້ທີ່ເຂົາກົ້ມຂາບລົງ, ດ້ວຍດວງຕາກະຈ່າງແຈ້ງ ຂ້ອຍເຫັນເຂົາ ແຕ່ຕອນນີ້ເຂົາບໍ່ໄດ້ຢູ່ທີ່ນີ້.
[17]ຂ້ອຍແນມເບິ່ງເຂົາ, ແຕ່ເຂົາບໍ່ໄດ້ຢູ່ໃກ້. ດາວດວງຫນຶ່ງຈະມາຈາກຢາໂຄບ, ແລະອາດຈະຂຶ້ນມາຈາກອິດສະຣາເອນ.
ເຂົາຈະເຮັດໃຫ້ພວກຜູ້ນຳຂອງໂມອາບກະຈັດກະຈາຍໄປ ແລະ ທຳລາຍເຊື້ອສາຍຂອງເຊດທັງຫມົດ.
[18]ແລ້ວເອໂດມຈະເປັນກຳມະສິດຂອງອິດສະຣາເອນ, ແລະເສອີກໍຈະເປັນກຳມະສິດຂອງພວກເຂົາດ້ວຍ, ສັດຕູຂອງ
ອິດສະຣາເອນຜູ້ທີ່ອິດສະຣາເອນຈະມີໄຊຊະນະດ້ວຍກຳລັງ.[19]ກະສັດອົງຫນຶ່ງຈະອອກມາຈາກຢາໂຄບ ຜູ້ທີ່ຈະຊົງຄອບຄອງ, ແລະ
ເຂົາຈະທຳລາຍຜູ້ທີ່ລອດຊີວິດຈາກເມືອງຂອງພວກເຂົາ.”
[20]ແລ້ວບາລາອາມ ໄດ້ເບິ່ງທີ່ອາມາເລກ ແລະໄດ້ເລີ່ມກ່າວຄຳທຳນວຍຂອງເຂົາ. ເຂົາກ່າວວ່າ, “ຄັ້ງຫນຶ່ງຄົນອາມາເລກ
ເຄີຍເປັນຊົນຊາດທີ່ຍິ່ງໃຫຍ່ທີ່ສຸດ, ແຕ່ໃນບັ້ນປາຍ ຂອງເຂົາຈະຈິບຫາຍໄປຕະຫລອດ.”
[21]ກໍຫລຽວໄປເຫັນຄົນເກນິດ ແລະເລີ່ມກ່າວຄຳທຳນວາຍຂອງເຂົາ. ເຂົາໄດ້ກ່າວວ່າ, “ບ່ອນທີ່ພວກທ່ານອາໄສຢູ່ເຂັ້ມແຂງຫລາຍ
ປອດໄພເຫມືອນຮັງນົກທີ່ງອຍ ຢູ່ເທິງໂງ່ນຫີນພຸ້ນ.[22]ຢ່າງໃດກໍຕາມຄົນເກນິດກໍຈະຖືກທຳລາຍ
ເມື່ອຊາວອັດຊີເຣຍມາຈັບພວກເຈົ້າໄປເປັນຊະເລີຍ."
[23]ແລ້ວບາລາອາມ ໄດ້ເລີ່ມກ່າວຄຳທຳນວາຍສຸດທ້າຍຂອງເຂົາ. ເຂົາກ່າວວ່າ,
“ໄພວິບັດແກ່ພວກເຈົ້າເມື່ອພຣະເຈົ້າຊົງເຮັດສິ່ງນີ້ໃຜຈະມີຊີວິດລອດໄດ້?[24]ເຮືອທັງຫລາຍຈະມາຈາກຣິມຝັ່ງຂອງກິດຕິມ;
ເຮືອເຫລົ່ານັ້ນຈະໂຈມຕີອັດຊີເຣຍ ແລະ ຈະຊະນະເອເບ, ແຕ່ ພວກເຂົາກໍຈະມີຈຸດຈົບໃນການຖືກທຳລາຍເຊັ່ນກັນ.”[25]ແລ້ວບາລາອາມ
ກໍລຸກຂຶ້ນແລະຈາກໄປ. ເຂົາໄດ້ກັບໄປຍັງບ້ານຂອງເຂົາ, ແລະບາຫລາກກໍຈາກໄປເຊັ່ນກັນ.


generated on Tue Jun 17 19:01:42 2025

25 [1]ເມື່ອຊາວອິດສະຣາເອນ ໄດ້ມາຕັ້ງຄ້າຍພັກຢູ່ທີ່ ຊິດຕິມ, ນັ້ນພວກຜູ້ຊາຍຊາວອິດສະຣາເອນ ໄດ້ສົມສູ່ຢູ່ກິນກັບຍິງຊາວໂມອາບ,
[2]ພວກແມ່ຍິງເຫລົ່ານີ້ ໄດ້ເຊື້ອເຊີນພວກເຂົາ ເຂົ້າຮ່ວມບຸນສະຫລອງພິທີຖວາຍບູຊາ ໃນບ່ອນຂາບໄຫວ້ພະຂອງຊາວໂມອາບ.
ພວກເຂົາໄດ້ກິນອາຫານທີ່ໄດ້ບູຊາແລ້ວ ແລະ ໄດ້ນົບຮູບພະທັງຫລາຍຂອງ ພວກເຂົາ[3]ຊາວອິດສະຣາເອນ ກໍໄດ້ຮ່ວມຂາບໄຫວ້ພະບາອານ
ແຫ່ງເປອໍດ້ວຍ, ສະນັ້ນ ອົງພຣະຢາເວຈຶ່ງໂກດຮ້າຍພວກເຂົາ

[4]ແລະ ພຣະຢາເວໄດ້ກ່າວຕໍ່ ໂມເຊ ວ່າ, “ໃຫ້ຈັບບັນດາຫົວໜ້າຂອງຊາດ ອິດສະຣາເອນ ທັງໝົດມາປະຫານຊີວິດ ຕໍ່ໜ້າຄົນທັງຫລາຍ. [ງ]
ຕໍ່ໜ້າພຣະຢາເວ ແລະ ພຣະຢາເວຈະບໍ່ໂກດຮ້າຍ ຊາວອິດສະຣາເອນ ຕໍ່ໄປ.”[5]ໂມເຊ ຈຶ່ງສັ່ງບັນດາເຈົ້າໜ້າທີ່ວ່າ, “ໃຫ້ແຕ່ລະຄົນ
ໃນພວກເຈົ້າປະຫານຊີວິດຂອງທຸກໆ ຄົນໃນເຜົ່າຂອງພວກເຈົ້າ ທີ່ຂາບໄຫວ້ພະບາອານ ແຫ່ງ ເປອໍ.”
[6]ມີຊາວອິດສະຣາເອນຜູ້ໜຶ່ງໄດ້ນຳຍິງຊາວມີດີອານ. ຜູ້ໜຶ່ງເຂົ້າໄປໃນເຕັນຂອງຕົນ ຕໍ່ໜ້າໂມເຊ ແລະ
ຊຸມຊົນທັງໝົດໃນຂະນະທີ່ກຳລັງໄວ້ທຸກທີ່ປະຕູເຂົ້າຫໍເຕັນ ບ່ອນອົງພຣະຢາເວສະຖິດຢູ່.[7]ເມື່ອ ຟີເນຮາດ ລູກຊາຍຂອງເອເລອາຊາ ແລະ
ຫລານຊາຍ ຂອງປະໂຣຫິດອາໂຣນ ໄດ້ເຫັນເຊັ່ນນັ້ນ; ລາວຈຶ່ງຖືຫອກລຸກຂຶ້ນໄປ ຈາກທີ່ປະຊຸມຕິດຕາມຊາຍ ແລະ ຍິງຄູ່ນັ້ນເຂົ້າໄປໃນເຕັນ.
[8]ແລະ ຊັດຫອກຂອງຕົນໃສ່ຈົນຊອດເຂົ້າທັງສອງ. ດ້ວຍເຫດນີ້ ໂຣກລະບາດທີ່ພວມ ທຳລາຍຊາວອິດສະຣາເອນ ຢູ່ນັ້ນຈຶ່ງຢຸດເຊົາລົງ,
[9]ແຕ່ໂຣກລະບາດນີ້ ກໍໄດ້ທຳລາຍ ປະຊາຊົນອິດສະຣາເອນ ໄປແລ້ວ 24,000 ຄົນ.
[10]ພຣະຢາເວ ໄດ້ກ່າວຕໍ່ໂມເຊ ວ່າ,[11]“ເພາະສິ່ງທີ່ ຟີເນຮາ ໄດ້ເຮັດນັ້ນ ເຮົາຈຶ່ງບໍ່ໂກດຮ້າຍປະຊາຊົນອິດສະຣາເອນອີກຕໍ່ໄປ.
ລາວໄດ້ຈັດການຢ່າງເດັດຂາດ ຕໍ່ຜູ້ທີ່ຂາບໄຫວ້ພະອື່ນ ໆ ນອກເຫນືອຈາກເຮົາ. ດ້ວຍເຫດນີ້ແຫລະ, ເຮົາຈຶ່ງບໍ່ໂກດຮ້າຍແລະທຳລາຍພວກເຂົາ.
[12]ສະນັ້ນ ເຈົ້າຈົ່ງບອກລາວວ່າ, ເຮົາຈະຕັ້ງຄຳສັນຍາຢ່າງໜຶ່ງໄວ້ກັບລາວຕະຫລອດໄປ[13]ຄື
ລາວຕະຫລອດທັງເຊື້ອສາຍຂອງລາວຈະໄດ້ເປັນປະໂຣຫິດຮັບໃຊ້ເຮົາ ສືບໆໄປ ເພາະວ່າລາວໄດ້ຈັດການຢ່າງເດັດຂາດກັບທຸກໆຄົນ
ທີ່ກະບົດຕໍ່ເຮົາ ແລະໄດ້ເຮັດໃຫ້ເຮົາຍົກໂທດປະຊາຊົນອິດສະຣາເອນ ເພາະພວກເຂົາໄດ້ເຮັດບາບ.”
[14]ຊາຍອິດສະຣາເອນ ທີ່ຖືກຂ້າຕາຍພ້ອມກັບຍິງ ມີດີອານ ນັ້ນຊື່ວ່າ ສີມຣີ ລູກຊາຍຂອງຊາລູ ຫົວໜ້າຄອບຄົວໃນເຜົ່າຊີເມໂອນ.
[15]ສ່ວນຍິງຊາວມີດີອານ ນັ້ນຊື່ວ່າ ໂກສະບີ ລູກສາວຂອງຊູເຣ ຫົວໜ້າຂອງໝວດໜຶ່ງໃນບັນດາຕະກຸນ ມີດີອານ.
[16]ພຣະຢາເວໄດ້ກ່າວຕໍ່ໂມເຊ ວ່າ,[17]“ຈົ່ງບຸກໂຈມຕີ ຊາວມີດີອານ ແລະ ທຳລາຍພວກເຂົາໃຫ້ກ້ຽງ.[18]ເພາະເຂົາປະຕິບັດກັບເຈົ້າດ້ວຍອຸບາຍ.
ເພາະພວກເຂົາໄດ້ເຮັດຊົ່ວຕໍ່ເຈົ້າ ທີ່ເມືອງເປອໍ ແລະ ຍ້ອນໂກສະບີ, ຜູ້ທີ່ໄດ້ຖືກຂ້າໃນເວລາ ທີ່ເກີດໂຣກລະບາດນັ້ນ.”

 generated on Tue Jun 17 19:01:42 2025

26 1ຕໍ່ມາ ຫລັງຈາກໄພພິບັດນັ້ນສະຫງົບລົງແລ້ວພຣະຜູ້ເປັນເຈົ້າກ່າວກັບໂມເຊ ແລະ ເອເລອາຊາລູກຊາຍອາໂຣນວ່າ,2"ຈົ່ງເຮັດສຳມະ-
ໂນຄົວຊຸມນຸມຊົນອິດສະຣາເອນທັງຫມົດ, ອາຍຸຕັ້ງແຕ່ຊາວປີຂຶ້ນໄປ, ຕາມຍາດຕິພີນ້ອງຕາມບັນພະບູລຸດຂອງພວກເຂົາທັງຫມົດໃນອິ-
ດສະຣາເອນ, ຜູ້ທີ່ສາມາດເຂົ້າສົງຄາມໄດ້."

3ໂມເຊກັບເອເລອາຊາຜູ້ເປັນປະໂລຫິດ ປາໄສກັບພວກເຂົາທີ່ທົ່ງພຽງໂມອາບແຄມແມ່ນ້ຳຢໍແດນໃກ້ເມືອງເຢຣິໂກວ່າ,4"ຈົ່ງເຮັດສຳມະໂນຄົວປະ-
ຊາຊົນ, ອາຍຸຕັ້ງແຕ່ຊາວປີຂຶ້ນໄປ, " ຕາມທີ່ພຣະຢາເວຊົງສັ່ງໂມເຊແລະຄົນອິສຣາເອນ ຜູ້ທີ່ອອກຈາກແຜ່ນດິນເອຢິບຄື."
5ເຜົ່າຣູເບັນ (ຣູເບັນ ເປັນລູກຊາຍກົກ ຂອງຢາໂຄບ) ປະກອບດ້ວຍຕະກຸນຂອງຮານົກຄົນຕະກຸນຮານົກ, ປານລູ ຄົນຕະກຸນປານລູ.6ເຮຊະໂຣນ
ຄົນຕະກຸນເຮຊະໂຣນແລະ ຄາມີ ຄົນຕະກຸນ ຄາມີ.7ເຫລົ່ານີ້ມາຈາກຕະກຸນຣູເບັນ ມີຈຳນວນພົນ 43,730 ຄົນ.
8ແລະລູກຊາຍຂອງປານລູ ຄືເອລີອາບ9ລູກຊາຍຂອງເອລີອາບຄື ເນມູເອນ, ດາທານ, ແລະອາບີຣາມ. ນີ້ຄືດາທານແລະອາບີ-
ຣາມທີ່ເລືອກຈາກຊຸມນຸມຊົນ, ເປັນຜູ້ຂັດຂວາງໂມເຊແລະອາໂຣນໃນພັກພວກໂກຣາ ຕອນທີ່ພວກເຂົາຂັດຂວາງພຣະຢາເວ.
10ແຜ່ນທໍລະນີໄດ້ອ້າປາກອອກກືນພວກເຂົາພ້ອມກັບໂກຣາ ແລະພັກພວກເຖິງຕາຍ. ໂດຍຖືກໄຟເຜົາຜານ250 ຄົນ, ແລະພວກເຂົາທັງ-
ຫລາຍເປັນເລື່ອງເຕືອນໃຈ.11ແຕ່ພວກ ລູກຊາຍຂອງ ໂກຣາ ບໍ່ໄດ້ຖືກຂ້າ.
12ລູກຊາຍຂອງຊີເມໂອນຕາມຕະກຸນຂອງລາວ ຄື: ເນມູເອນ, ຄົນຕະກຸນເນມູເອນ, ຢາມິນ, ຄົນຕະກຸນຢາມິນ, ຢາກິນ, ຄົນຕະກຸນຢາກິນ,13ເຊ-
ຣາ, ຄົນຕະກຸນເຊຣາ, ຊາອູນ, ຄົນຕະກຸນຊາອູນ.14ຕະກຸນເຫລົ່ານີ້ເປັນຕະກຸນຂອງຄົນຊີເມໂອນ, ມີຈຳນວນສອງຫມື່ນສອງພັນສອງຮ້ອຍຄົນ.
15ບຸດຂອງກາດ ຕາມຕະກຸນຂອງລາວ: ຄືເຊໂຟນ, ຄົນຕະກຸນເຊໂຟນ, ຮັກກີ, ຄົນຕະກຸນຮັກກີ, ຊູນີ, ຄົນຕະກຸນຊູນີ,16ໂອສະນີ,
ຄົນຕະກຸນໂອສະນີ, ເອຣີ, ຄົນຕະກຸນເອຣີ,17ອາໂຣດ, ຄົນຕະກຸນອາໂຣດ, ອາເຣລີ, ຄົນຕະກຸນອາເຣລີ,18ຕະກຸນ, ເຫລົ່ານີ້ມີຈານວນພົນ
40,500 ຄົນ.
19ລູກຊາຍຂອງຢູດາຄື ເອຣະແລະໂອນານ, ເອຣະກັບໂອນານຕາຍໃນແຜ່ນດິນການາອານ.20ແລະລູກຊາຍຂອງຢູດາຕາມຕະກຸນຂອງລາວ ຄື:
ເຊລາ, ຄົນຕະກຸນເຊລາ, ເປເຣັດ, ຄົນຕະກຸນເປເຣັດ, ເຊຣາ, ຄົນຕະກຸນເຊຣາ,21ແລະລູກຊາຍຂອງເປເຣັດຕາມຕະກຸນຂອງລາວຄື:
ເຮດຊະໂຣນ ຄົນຕະກຸນເຮດຊະໂຣນ, ຮາມູນ, ຄົນຕະກຸນຮາມູນ.22ຕະກຸນເຫລົ່ານີ້, ມີຈຳນວນພົນ 76,500 ຄົນ.
23ເຜົ່າອິດຊາຄາ ປະກອບດ້ວຍຕະກຸນ ໂຕລາ, ຄົນຕະກຸນໂຕລາ, ປູວາ, ຄົນຕະກຸນປູວາ,24ຢາຊຸບ, ຄົນຕະກຸນຢາຊຸບ ແລະ ຊິມໂຣນ,
ຄົນຕະກຸນຊິມໂຣນ.25ຕະກຸນເຫລົ່ານີ້ ມີຈຳນວນພົນ 64,300 ຄົນ.
26ເຜົ່າເຊບູໂລນ ປະກອບດ້ວຍ: ເສເຣັດ, ຄົນຕະກຸນເສເຣັດ ເອໂລນ, ຄົນຄອບຄົວເອໂລນ, ຢາເລເອນ, ຄົນຕະກຸນຢາເລເອນ.
27ຕະກຸນເຫລົ່ານີ້ຂອງເຜົ່າເຊບູໂລນ, ມີຈຳນວນພົນ 60,500 ຄົນ.
28ລູກຊາຍຂອງໂຢເຊັບຕາມຕະກຸນຂອງລາວ ຄື: ມານາເຊແລະເອຟຣາຢິມ.29ລູກຊາຍຂອງມານາເຊ ຄື: ມາກີ, ຄົນຕະກຸນມາກີ (ມາກີໃຫ້ກຳ-
ເນີດບຸດຊື່ກີເລອາດ), ກີເລອາດ, ຄົນຕະກຸນກີເລອາດ
30ລູກຊາຍຂອງກີເລອາດ ຄືອີເອເຊ, ຄົນຕະກຸນອີເອເຊ, ເຮເລັກ, ຄົນຕະກຸນເຮເລັກ.31ແລະອາຊະຣີເອນ, ຄົນຕະກຸນອາຊະຣີເອນ, ເຊເຄັມ,
ຄົນຕະກຸນເຊເຄັມ.32ແລະເຊມີດາ, ຄົນຕະກຸນເຊມີດາ ເຮເຟ ຄົນຕະກຸນເຮເຟ.
33ເສໂລເຟຮັດ ຜູ້ທີ່ເປັນລູກຊາຍຂອງ ເຮເຟ ບໍ່ມີລູກຊາຍ ມີແຕ່ລູກສາວ. ຊື່ງມີຊື່ດັ່ງນີ້: ມາຮະລາ, ໂນອາ, ໂຮຄະລາ, ມິລະກາ ແລະ ຕີຣະຊາ.
34ຕະກຸນເຫລົ່ານີ້ ມີຈຳນວນພົນ 52,700 ຄົນ.
35ຕໍ່ໄປນີ້ເປັນລູກຊາຍຂອງເອຟຣາຢິມຕາມຕະກຸນຂອງລາວຄື ຊູເທລາ, ຄົນຕະກຸນຊູເທລາ, ເບເຄ, ຄົນຕະກຸນເບເຄ. ຕາຮານ, ຄົນຕະກຸນຕາ-
ຮານ36ຕະກຸນຂອງ ເອຣານ ສືບເຊື້ອສາຍມາຈາກ ຊູເທລາ.37ຕະກຸນເຫລົ່ານີ້ ມີຈຳນວນພົນ 32,500 ຄົນ. ຕະກຸນເຫລົ່ານີ້
ແມ່ນສືບເຊື້ອສາຍມາຈາກໂຢເຊັບ.
38ລູກຊາຍຂອງເບັນຢາມິນຕາມຄອບຄົວຂອງລາວຄື: ເບລາ, ຄົນຕະກຸນເບລາ, ອາຊະເບັນ, ຄົນຕະກຸນອາຊະເບັນ, ອາຮີຣາມ ຄົນຕະກຸນອາຮີ-
ຣາມ.39ເຊຟູຟາມ ຄົນຕະກຸນຊູຟາມ, ຮູຟາມ, ຄົນຕະກຸນຮູຟາມ.40ແລະລູກຊາຍຂອງເບລາ, ຄືອາດແລະນາອາມານ ຄົນຕະກຸນ ອາດ, ນາອາ-
ມານ ຄົນຕະກຸນນາອາມານ.41ຄົນເຫລົ່ານີ້ເປັນລູກຊາຍຂອງເບັນຢາມິນຕາມຕະກຸນຂອງລາວ ຕະກຸນເຫລົ່ານີ້ ມີຈຳນວນພົນ 45,600 ຄົນ.
42ຕໍ່ໄປນີ້ເປັນລູກຊາຍຂອງດານຕາມຕະກຸນຂອງລາວຄື: ຊູຮາມ ຄົນຕະກຸນຊູຮາມ, ເປັນຕະກຸນຂອງດານຕາມຕະກຸນຂອງລາວ43ຊຶ່ງມີຈຳນວນພົນ
64,400 ຄົນ.
44ບຸດຂອງອາເຊຕາມຕະກຸນຂອງລາວຄື: ອິມນາ ຄົນຄອບຄົວອິມນາ ອີຊະວີ, ຄົນຕະກຸນອີຊະວີ, ເບຣິອາ, ຄົນຕະກຸນ ເບຣິອາ.
45ລູກຊາຍຂອງເບຣິອາຄື: ເຮເບ. ຄົນຕະກຸນເຮເບ, ມັນກີເອນ ຄົນຕະກຸນມັນກີເອນ.46ອາເຊ ມີລູກສາວ ຜູ້ຫນຶ່ງຊື່ວ່າ ເຊຣາ.47ຕະກຸນເຫລົ່ານີ້
ມີຈຳນວນພົນ 53,400 ຄົນ.
48ລູກຊາຍຂອງນັບທາລີຕາມຕະກຸນຂອງລາວ ຄື: ຢາເຊເອນ ຄົນຕະກຸນຢາເຊເອນ, ກູນີ, ຄົນຕະກຸນກູນີ,49ເຢດເຊ, ຄົນຕະກຸນເຢດເຊ, ຊິນເລັມ,
ຄົນຕະກຸນຊິນເລັມ.50ຕະກຸນເຫລົ່ານີ້, ມີຈຳນວນພົນ 45,400 ຄົນ.
51ຈຳນວນຜູ້ຊາຍ ຊາວອິດສະຣາເອນ: ທັງຫມົດມີ 601,730 ຄົນ.
52ພຣະຢາເວໄດ້ບອກໂມເຊ ວ່າ,53"ຈົ່ງແບ່ງດິນແດນ ໃຫ້ແກ່ຊາວອິດສະຣາເອນ ເຜົ່າຕ່າງໆ ຕາມຈຳນວນລາຍຊື່ຂອງ ປະຊາຊົນ.
54ມໍລະດົກສ່ວນໃຫຍ່ກໍໃຫ້ແບ່ງແກ່ຄົນຕະກຸນໃຫຍ່, ແລະມໍລະດົກສ່ວນນ້ອຍກໍໃຫ້ແບ່ງແກ່ຄົນຕະກຸນນ້ອຍ, ທຸກຕະກຸນຈະໄດ້ຮັບສ່ວນມໍລະ-
ດົກຕາມຈຳນວນຄົນ.55ແຕ່ໃຫ້ຈັບສະຫລາກແບ່ງແຜ່ນດິນນັ້ນ, ໃຫ້ພວກເຂົາໄດ້ຮັບມໍລະດົກຕາມລາຍຊື່ຕະກຸນຂອງບັນພະບູລຸດຂອງພວກເຂົາ.
56ໃຫ້ຈັບສະຫລາກແບ່ງມໍລະດົກຂອງພວກເຂົານັ້ນຕາມສ່ວນຕະກຸນໃຫຍ່ ແລະຕະກຸນນ້ອຍ."
57ສ່ວນເຜົ່າເລວີ ນັ້ນປະກອບດ້ວຍ ຕະກຸນ ດັ່ງນີ້: ເກໂຊນ, ຄົນຕະກຸນເກໂຊນ, ໂກຮາດ, ຄົນຕະກຸນໂກຮາດ, ແລະ ເມຣາຣີ, ຄົນຕະກຸນເມຣາຣີ.
58ຕໍ່ໄປນີ້ເປັນຕະກຸນຂອງເລວີ ຄື: ຄົນຕະກຸນລິບນີ ເຮບໂຣນ, ຄົນຕະກຸນເຮັບໂຣນ, ຄົນຕະກຸນມາລີ, ຄົນຕະກຸນມູຊີ, ຄົນຕະກຸນໂກຣາ, ແລະໂກ-
ຮາດໃຫ້ກຳເນີດບຸດຊື່ອຳຣາມ.59ເມຍ ຂອງລາວແມ່ນ ໂຢເກເບັດ, ລູກສາວຂອງ ເລວີ ທີ່ເກີດໃນປະເທດເອຢິບ. ນາງໄດ້ເກີດລູກຊາຍໃຫ້ ອຳຣາມ
ສອງຄົນດັ່ງນີ້: ອາໂຣນ ແລະ ໂມເຊ ກັບລູກສາວຜູ້ຫນຶ່ງຊື່ ມີຣີອາມ.

[60]ອາໂຣນ ມີລູກຊາຍສີ່ຄົນ ດັ່ງນີ້: ນາດາບ ອາບີຮູ, ເອເລອາຊາ ແລະ ອີທາມາ.[61]ນາດາບ ແລະ ອາບີຮູ
ໄດ້ຕາຍຕອນທີ່ພວກເຂົາໄດ້ຖວາຍບູຊາໄຟທີ່ຕ້ອງຫ້າມ ຕໍ່ຫນ້າອົງພຣະຢາເວ.[62]ລູກຊາຍຂອງຊາວເລວີ ທີ່ມີອາຍຸ ຫນຶ່ງເດືອນຂຶ້ນໄປ
ມີຈຳນວນສອງຫມື່ນສາມພັນ ຄົນ. ພວກເຂົາບໍ່ໄດ້ຖືກນັບຮ່ວມເຂົ້າກັບປະຊາຊົນອິດສະຣາເອນ ເພາະອື່ນ ໆ
ຍ້ອນພວກເຂົາຈະບໍ່ໄດ້ຮັບຊັບສົມບັດສ່ວນໃດໆ ຢູ່ໃນຊາດອິດສະຣາເອນ.
[63]ໂມເຊ ແລະ ເອເລອາຊາ ເປັນຜູ້ຈົດທະບຽນຕະກຸນຕ່າງໆ ເຫລົ່ານີ້. ເມື່ອເພິ່ນໄດ້ເຮັດສຳມະໂນຄົວ ຊາວອິດສະຣາເອນ ທີ່ທົ່ງພຽງໂມອາບ
ຊຶ່ງຢູ່ອີກຟາກຫນຶ່ງຂອງແມ່ນ້ຳຈໍແດນທີ່ເມືອງເຢຣີໂກ.[64]ແຕ່ຕາມລາຍຊື່ເຫລົ່ານີ້ບໍ່ມີຊາຍຈັກຄົນຫນຶ່ງຊຶ່ງໂມເຊແລະອາໂຣນປະໂລ-
ຫິດໄດ້ນັບໄວ້ຕອນທີ່ນັບຄົນອິດສະຣາເອນໃນຖິ່ນແຫ້ງແລ້ງກັນດານຊີນາຍ.
[65]ເພາະອົງພຣະຢາເວ ໄດ້ກ່າວຕໍ່ພວກເຂົາໄວ້ວ່າ, ພວກເຂົາທຸກຄົນຈະຕ້ອງ ຕາຍໃນຖິ່ນແຫ້ງແລ້ງກັນດານ, ກໍໄດ້ເປັນດັ່ງນັ້ນທຸກປະການ
ຍົກເວັ້ນແຕ່ກາເລບລູກຊາຍຂອງເຢຟຸນເນ ແລະໂຢຊວຍ ລູກຊາຍຂອງນູນ.

 generated on Tue Jun 17 19:01:42 2025

27 [1]ຕອນນັ້ນ ລູກສາວທັງຫລາຍຂອງ ເຊໂລເຟຂາດ ຜູ້ເປັນບຸດຂອງເຮເຟ ຜູ້ເປັນບຸດຂອງກິເລອາດ ຜູ້ທີ່ເປັນບຸດຂອງມາກີ, ລູກຊາຍຂອງມາ-
ນາເຊ, ຜູ້ຊຶ່ງສືບຕະກຸນຂອງໂຢເຊັບໄດ້ເຂົ້າມາ ລູກສາວທັງຫລາຍຂອງພວກເຂົາຄື: ມາລາ, ໂນອາ, ໂຮກລາ, ມີລະກາ ແລະ ຕີຣະຊາ.

[2]ພວກເຂົາມາຢືນຢູ່ຊ້ອງຫນ້າໂມເຊ, ປະໂຣຫິດເອເລອາຊາ, ບັນດາຜູ້ນຳແລະ ຊຸມຊົນທັງຫມົດທີ່ທາງເຂົ້າຫໍເຕັນບ່ອນອົງພຣະຢາເວສະຖິດຢູ່
ແລະ ຮຽກຮ້ອງສິດທິຂອງພວກ. ຕົນວ່າ,[3]“ພໍ່ຂອງພວກເຮົາໄດ້ຕາຍໃນຖິ່ນ ແຫ້ງແລ້ງກັນດານ. ໂດຍບໍ່ມີລູກຊາຍຈັກຄົນ.
ເພິ່ນບໍ່ແມ່ນພັກພວກຂອງໂກຣາ. ຜູ້ທີ່ໄດ້ກະບົດຕໍ່ອົງພຣະຢາເວ ເພິ່ນໄດ້ຕາຍໄປ ຍ້ອນບາບກຳຂອງເພິ່ນເອງ.
[4]ເປັນຫຍັງ ຈຶ່ງເຮັດໃຫ້ນາມຊື່ພໍ່ຂອງພວກເຮົາຕ້ອງດັບສູນໄປຈາກຊາດອິດສະຣາເອນ ເພາະເພິ່ນບໍ່ມີລູກຜູ້ຊາຍພຽງເທົ່ານັ້ນຊັ້ນບໍ?
ຂໍໃຫ້ພວກເຮົາມີດິນແດນຢູ່ໃນທ່າມກາງຍາດຕິພີ່ນ້ອງຂອງພວກເຮົາດ້ວຍເຖີດ.”[5]ໂມເຊ ໄດ້ນຳເລື່ອງນີ້ໄປຕໍ່ຫນ້າອົງພຣະຢາເວ.
[6]ແລະ ພຣະຢາເວກໍໄດ້ບອກເພິ່ນວ່າ,[7]“ລູກສາວຂອງເຊໂລເຟຮາດ ເວົ້າຖືກຕ້ອງແລ້ວ. ເຈົ້າຈົ່ງໃຫ້ກຳມະສິດທີ່ດິນໃນທ່າມກາງພີ່-
ນ້ອງຂອງພວກເຂົາ ແລະ ໃຫ້ມໍລະດົກບິດາຂອງພວກເຂົາຕົກທອດມາເຖິງພວກເຂົາ.[8]ເຈົ້າຈົ່ງກ່າວແກ່ຄົນອິດສະຣາເອນວ່າ,
“ຖ້າຊາຍຄົນຫນຶ່ງໄດ້ຕາຍໄປ ໂດຍທີ່ລາວບໍ່ມີລູກຊາຍ, ກໍຈົ່ງໃຫ້ມໍລະດົກຂອງລາວຕົກໄປເປັນຂອງລູກສາວຂອງລາວໄດ້.
[9]ຖ້າລາວບໍ່ມີລູກສາວ ກໍຈົ່ງໃຫ້ມໍລະດົກສ່ວນນັ້ນຕົກເປັນຂອງພີ່ນ້ອງຂອງລາວເສຍ.[10]ຖ້າລາວບໍ່ມີອ້າຍນ້ອງ, ກໍຈົ່ງມອບໃຫ້ເປັນຂອງພີ່-
ນ້ອງຂອງພໍ່ລາວ.[11]ແລະຖ້າພໍ່ຂອງລາວກໍບໍ່ມີພີ່ນ້ອງ, ກໍຈົ່ງໃຫ້ມໍລະດົກນັ້ນຕົກເປັນຂອງຍາດພີ່ນ້ອງທີ່ໃກ້ຊິດຕໍ່ໄປ, ເປັນຜູ້ມີສິດໃນການສືບມໍລະ-
ດົກນັ້ນ. ນີ້ເປັນຄຳສັ່ງ ເປັນກົດເກນສຳລັບອິດສະຣາເອນ ທີ່ພຣະຢາເວຊົງສັ່ງໃຫ້ໄວ້ກັບໂມເຊ.”
[12]ພຣະຢາເວຊົງກ່າວກັບໂມເຊວ່າ, “ຈົ່ງເດີນທາງໄປພູ ອາບາຣີມ ເພື່ອໄປເບິ່ງແຜ່ນດິນທີ່ເຮົາຈະມອບໃຫ້ພວກອິດສະຣາເອນ.
[13]ຫລັງຈາກທີ່ເຈົ້າໄດ້ເຫັນແລ້ວ, ເຈົ້າຈະຕາຍຄືກັນກັບ ອາໂຣນ ອ້າຍຂອງເຈົ້າ[14]ເພາະເຈົ້າທັງສອງໄດ້ຝ່າຝືນຂໍ້ຄຳສັ່ງຂອງເຮົາ
ທີ່ຖິ່ນແຫ້ງແລ້ງກັນດານ ຊິນ, ຄາວທີ່ຊຸມຊົນອິດສະຣາເອນ ທັງຫມົດໄດ້ຈົ່ມຮ້າຍໃສ່ເຮົາທີ່ ເມຣິບາ ນັ້ນ
ເຈົ້າປະຕິເສດບໍ່ຍອມຮັບຂໍ້ຄຳສັ່ງຂອງເຮົາຕໍ່ຫນ້າພວກເຂົາ.” (ເມຣິບາ ແມ່ນບໍ່ນໍ້າທີ່ກາເດັດ ໃນຖິ່ນແຫ້ງແລ້ງກັນດານ ຊິນ.)
[15]ໂມເຊ ໄດ້ອ້ອນວອນ ອະທິຖານຕໍ່ອົງພຣະຢາເວ ວ່າ,[16]“ ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງເປັນບໍ່ເກີດແຫ່ງຊີວິດຂອງທຸກຄົນ,
ຂໍຊົງໂຜດແຕ່ງຕັ້ງໃຫ້ມີຜູ້ນຳປະຊາຊົນເຫລົ່ານີ້.[17]ຜູ້ທີ່ເປັນບັງຄັບບັນຊາພວກເຂົາອອກສູ່ສະໜາມຮົບ, ເພື່ອວ່າຊຸມນຸມຊົນຂອງພຣະອົງນີ້,
ຈະບໍ່ເປັນເໝືອນແກະທີ່ຂາດຜູ້ລ້ຽງ.”
[18]ພຣະຢາເວຈຶ່ງກ່າວຕໍ່ໂມເຊວ່າ, “ຈົ່ງໄປເອົາໂຢຊວຍລູກຊາຍຂອງນູນ, ຊຶ່ງເປັນຜູ້ທີ່ມີຄວາມສາມາດ, ແລະມີພຣະວິນຍານ,
ແລ້ວໃຫ້ວາງມືເທິງຫົວເພິ່ນ.[19]ໃຫ້ເອົາລາວຢືນຢູ່ຕໍ່ຫນ້າປະໂລຫິດ ເອເລອາຊາແລະຊຸມນຸມຊົນທັງຫມົດ ແລ້ວໃຫ້ປະກາດແຕ່ງ-
ຕັ້ງໃຫ້ລາວເປັນຜູ້ສືບແທນເຈົ້າຕໍ່ຫນ້າຄົນເຫລົ່ານີ້.
[20]ເພື່ອໃຫ້ຊຸມນຸມຊົນອິດສະຣາເອນຟັງຄວາມເພິ່ນ, ຂໍໃຫ້ມອບສິດ ແລະອຳນາດບາງຢ່າງຂອງເຈົ້າໃຫ້ໂຢຊວຍ.[21]ໂຢຊວຍຈະປຶກສາກັບປະໂລ-
ຫິດ ເອເລອາຊາ ຜູ້ທີ່ຮູ້ຈັກນໍ້າພຣະໄທຂອງເຮົາ, ໂດຍອູຣິມແລະທູມມິມ. ໂດຍວິທີນີ້ເອເລອາຊາຈະແນະນຳ ໂຢຊວຍແລະຊຸມນຸມຊົນອິດສະຣາ-
ເອນທັງຫມົດ, ຕາມຫນ້າທີ່ຂອງພວກເຂົາ.”
[22]ໂມເຊໄດ້ປະຕິບັດຕາມຄຳສັ່ງຂອງພຣະຢາເວ. ເພິ່ນໄດ້ໃຫ້ໂຢຊວຍຢືນຂຶ້ນຢູ່ຕໍ່ຫນ້າປະໂລຫິດແລະຊຸມນຸມຊົນທັງຫມົດ.
[23]ເພິ່ນໄດ້ວາງມືລົງເທິງຫົວໂຢຊວຍແລະປະກາດແຕ່ງຕັ້ງລາວໃຫ້ເປັນຜູ້ສືບທອດຕຳແຫນ່ງແທນຕົນ,
ຕາມທີ່ອົງພຣະຢາເວໄດ້ສັ່ງເພິ່ນໄວ້ທຸກປະການ.

28 [1]ພຣະຢາເວໄດ້ບອກໂມເຊ,[2]“ຈົ່ງບອກຄົນອິດສະຣາເອນ ແລະ ກ່າວແກ່ພວກເຂົາວ່າ, ' ເຄື່ອງບູຊາຂອງເຮົາ ອາຫານຂອງເຮົາ
ຊຶ່ງເປັນເຄື່ອງບູຊາດ້ວຍໄຟ ໃຫ້ເປັນກິ່ນທີ່ພໍພຣະໄທ, ພວກເຈົ້າຈົ່ງເອົາໃຈໃສ່ທີ່ຈະຖວາຍບູຊາແກ່ເຮົາຕາມເວລາກຳຫນົດ.'

[3]ແລະເຈົ້າຈົ່ງກ່າວແກ່ພວກເຂົາວ່າ, ' ນີ້ເປັນເຄື່ອງບູຊາດ້ວຍໄຟຊຶ່ງພວກເຈົ້າຄວນຖວາຍແກ່ພຣະຢາເວ, ຄືລູກແກະອາຍຸຫນຶ່ງປີບໍ່ມີຕຳ-
ຫນິສອງໂຕ, ເປັນເຄື່ອງບູຊາປະຈຳທຸກວັນ.[4]ເຈົ້າຈົ່ງຖວາຍລູກແກະເປັນເຄື່ອງບູຊາໃນຕອນເຊົ້າໂຕຫນຶ່ງ ແລະລູກແກະອີກໂຕຫນຶ່ງນັ້ນເຈົ້າ
ຈົ່ງຖວາຍບູຊາໃນຕອນຄ່ຳ.[5]ແລະຍອດແປ້ງຫນຶ່ງສ່ວນສິບເອຟາເປັນເຄື່ອງບູຊາພືດຜົນເປັນເມັດນວດກັບນ້ຳມັນສະກັດຫນຶ່ງໃນສີ່ຮິນ.
[6]ອັນນີ້ ແມ່ນເຄື່ອງຖວາຍບູຊາປະຈຳວັນ ທີ່ຕ້ອງເຜົາໃຫ້ຫມົດຕາມ ພິທີຖວາຍບູຊາອາຫານເທື່ອທຳອິດທີ່ພູເຂົາຊີນາຍ ກິ່ນຫອມຫວນ,
ຈຶ່ງເປັນທີ່ພໍໃຈອົງພຣະຢາເວ.[7]ສ່ວນເຄື່ອງດື່ມບູຊາ ຄືເຫລົ້າອະງຸ່ນຫນຶ່ງລິດທີ່ຖວາຍພ້ອມກັບລູກແກະໂຕທີ່ຫນຶ່ງນັ້ນ ໃຫ້ຖອກໃສ່ແທ່ນບູຊາ.
[8]ລູກແກະໂຕທີ່ສອງ ທີ່ຈະຖວາຍໃນຕອນແລງ ໃຫ້ຖວາຍຢ່າງດຽວກັນ ກັບການຖວາຍໃນຕອນເຊົ້າ ແລະ ໃຫ້ຖວາຍ ເຫລົ້າອະງຸ່ນພ້ອມ.
ອັນນີ້ກໍແມ່ນການຖວາຍອາຫານຄືກັນ, ກິ່ນຫອມຫວນຈຶ່ງເປັນທີ່ພໍໃຈອົງພຣະຢາເວ.
[9]ໃນວັນສະບາໂຕ ລູກແກະອາຍຸຫນຶ່ງປີສອງຕົວ, ທີ່ບໍ່ມີຕຳຫນິ, ແລະ ຍອດແປ້ງສອງໃນສິບເອຟານວດກັບນ້ຳມັນໃຫ້ເປັນເຄື່ອງພືດຜົນບູຊາ ແລະ
ເຄື່ອງດື່ມບູຊາ.[10]ນີ້ເປັນເຄື່ອງເຜົາບູຊາທຸກວັນສະບາໂຕນອກເຫນືອເຄື່ອງເຜົາບູຊາປະຈຳ, ແລະ ເຄື່ອງດື່ມບູຊາ.
[11]ໃນເວລາຕົ້ນເດືອນທຸກເດືອນ, ພວກເຈົ້າຈົ່ງຖວາຍເຄື່ອງເຜົາບູຊາແກ່ພຣະຢາເວ, ຄືງົວຫນຶ່ງສອງໂຕ, ແກະຜູ້ໂຕຫນຶ່ງ, ລູກແກະຫນຶ່ງປີບໍ່ມີຕຳ-
ຫນິເຈັດໂຕ.[12]ສຳລັບງົວໂຕຫນຶ່ງຈົ່ງເອົາຍອດແປ້ງສາມໃນສິບເອຟານວດກັບນ້ຳມັນສຳລັບເປັນເຄື່ອງພືດຜົນບູຊາ, ແລະ ສຳ-
ລັບແກະຜູ້ໂຕຫນຶ່ງນັ້ນ ຈົ່ງເອົາຍອດແປ້ງສອງໃນສິບເອຟານວດກັບນ້ຳມັນເປັນເຄື່ອງພືດຜົນບູຊາ.[13]ສຳລັບລູກແກະທຸກໂຕ
ຈົ່ງເອົາຍອດແປ້ງຫນຶ່ງໃນສິບເອຟານວດກັບນ້ຳມັນເປັນເຄື່ອງພືດຜົນບູຊາ, ໃຫ້ເປັນເຄື່ອງເຜົາບູຊາທີ່ມີກິ່ນຫອມທີ່ພໍພຣະໄທ, ເປັນເຄື່ອງບູ-
ຊາດ້ວຍໄຟຖວາຍແກ່ພຣະຢາເວ.
[14]ສ່ວນເຄື່ອງດື່ມບູຊາຄູ່ກັນນັ້ນ ສຳລັບງົວເຖິກໂຕຫນຶ່ງຈົ່ງເອົານ້ຳອະງຸ່ນເຄິ່ງຮິນ, ສຳລັບແກະຜູ້ໂຕຫນຶ່ງຈົ່ງເອົາຫນຶ່ງໃນສາມຮິນ, ສຳ-
ລັບລູກແກະໂຕຫນຶ່ງຈົ່ງເອົາຫນຶ່ງໃນສີ່ຮິນ, ນີ້ເປັນເຄື່ອງເຜົາບູຊາປະຈຳເດືອນ ທຸກເດືອນຕະຫລອດປີ.[15]ແລະເອົາລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູ-
ຊາໄຖ່ບາບຖວາຍແກ່ພຣະຢາເວ. ໃຫ້ນຳມາບູຊານອກເຫນືອເຄື່ອງເຜົາບູຊາປະຈຳ ແລະ ເຄື່ອງດື່ມບູຊາພ້ອມ.
[16]ໃນວັນທີສິບສີ່ຂອງເດືອນທີຫນຶ່ງ, ໃຫ້ພວກເຈົ້າສະເຫລີມສະຫລອງ ປັດສະຄາເພື່ອຍົກຍໍໃຫ້ກຽດພຣະຢາເວ.[17]ໃນວັນທີສິບຫ້າ
ໃຫ້ເລີ່ມເທດສະການຂຶ້ນ ເຈັດວັນ ຊຶ່ງໃນລະຫວ່າງນີ້, ໃຫ້ກິນເຂົ້າຈີ່ບໍ່ມີເຊື້ອແປ້ງເທົ່ານັ້ນ.[18]ໃນວັນເລີ່ມຕົ້ນ, ຂອງເທດສະການ
ໃຫ້ພວກເຈົ້າເຕົ້າໂຮມກັນເພື່ອນະມັດສະການ ແລະ ຢ່າເຮັດວຽກໃດໆ ທັງສິ້ນ.
[19]ແຕ່ຈົ່ງຖວາຍບູຊາດ້ວຍໄຟ ເປັນເຄື່ອງເຜົາບູຊາແກ່ພຣະຢາເວ. ຄືເອົາງົວຫນຸ່ມສອງໂຕ, ແກະຜູ້ໂຕຫນຶ່ງ, ແລະ ລູກແກະອາຍຸຫນຶ່ງປີເຈັດໂຕ,
ເບິ່ງໃຫ້ດີວ່າບໍ່ມີຕຳຫນິ.[20]ແລະ ເອົາຍອດແປ້ງນວດນ້ຳມັນເປັນເຄື່ອງພືດຜົນບູຊາຂອງສັດເຫລົ່ານັ້ນ, ສຳລັບງົວ-
ເຖິກໂຕຫນຶ່ງເຈົ້າຈົ່ງຖວາຍສາມໃນສິບເອຟາ, ແລະ ສຳລັບແກະຜູ້ໂຕໜຶ່ງສອງໃນສິບເອຟາ.[21]ສຳລັບລູກແກະໂຕຫນຶ່ງໃນລູກແກະເຈັດໂຕນັ້ນ,
ຈົ່ງເອົາແປ້ງຫນຶ່ງໃນສິບເອຟາ.[22]ແລະ ເອົາແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ ເພື່ອເຮັດການລຶບລ້າງມົນທິນບາບຂອງເຈົ້າ.
[23]ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ ນອກເຫນືອເຄື່ອງເຜົາບູຊາຕອນເຊົ້າ ຊຶ່ງເປັນເຄື່ອງບູຊາປະຈຳນັ້ນ.[24]ໃນທຳນອງດຽວກັນ
ເຈົ້າຈົ່ງຖວາຍເຄື່ອງບູຊາທຸກວັນຕະຫລອດທັງເຈັດມື້, ຄືຖວາຍອາຫານເປັນເຄື່ອງບູຊາດ້ວຍໄຟ, ເປັນກິ່ນຫອມທີ່ພໍພຣະໄທພຣະຢາເວ.
ຈົ່ງຖວາຍບູຊານອກເຫນືອເຄື່ອງເຜົາບູຊາປະຈຳ ແລະ ເຄື່ອງດື່ມບູຊາດ້ວຍ.[25]ໃນມື້ທີເຈັດ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ
ເພື່ອຖວາຍກຽດພຣະຢາເວ, ເຈົ້າຢ່າເຮັດວຽກຫນັກໃນມື້ນັ້ນ.
[26]ໃນວັນຖວາຍຜົນລຸ້ນທຳອິດ, ເມື່ອເຈົ້າເອົາເຂົ້າໃຫມ່ມາເປັນເຄື່ອງພືດຜົນບູຊາຖວາຍແກ່ພຣະຢາເວໃນເທດສະການລະດູເກັບກ່ຽວນັ້ນ,
ເຈົ້າຈົ່ງມີການປະຊຸມບໍລິສຸດເພື່ອຖວາຍກຽດພຣະຢາເວ, ເຈົ້າຢ່າເຮັດວຽກຫນັກໃນມື້ນັ້ນ.[27]ແຕ່ຈົ່ງຖວາຍເຄື່ອງເຜົາບູຊາໃຫ້ເປັນກິ່ນຫອມທີ່ພໍ-
ພຣະໄທແກ່ພຣະຢາເວ. ຄືຖວາຍງົວຫນຸ່ມສອງໂຕ ແກະຜູ້ໂຕຫນຶ່ງ, ລູກແກະອາຍຸຫນຶ່ງປີເຈັດໂຕ.[28]ແລະ ຖວາຍຍອດແປ້ງນວດກັບນ້ຳ-
ມັນເປັນເຄື່ອງພືດຜົນບູຊາ, ຄືສຳລັບງົວໂຕຫນຶ່ງຖວາຍແປ້ງສາມໃນສິບເອຟາ. ສຳລັບແກະຜູ້ຫນຶ່ງໂຕນັ້ນແມ່ນສອງໃນສິບເອຟາ.
[29]ສຳລັບລູກແກະເຈັດໂຕ ໂຕລະຫນຶ່ງໃນສິບເອຟາ.[30]ພ້ອມກັບລູກແບ້ຜູ້ໂຕຫນຶ່ງສຳລັບລົບລ້າງມົນທິນຂອງເຈົ້າ,[31]ນອກຈາກເຄື່ອງເຜົາບູຊາປະຈຳ,
ແລະ ເຄື່ອງບູຊາພືດຜົນເປັນເມັດ ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ ແລະ ເຄື່ອງດື່ມບູຊາດ້ວຍ, ເບິ່ງໃຫ້ດີວ່າຕ້ອງປາດສະຈາກຕຳຫນິ.”


generated on Tue Jun 17 19:01:42 2025

29 [1]ໃນວັນທີຫນຶ່ງຂອງເດືອນທີເຈັດ, ໃຫ້ພວກເຈົ້າເຕົ້າໂຮມກັນ, ເພື່ອນະມັດສະການ ແລະ ຢ່າເຮັດວຽກໃດໆທັງສິ້ນ. ໃນວັນນີ້ຈົ່ງເປົ່າແກ
ໃຫ້ດັງສະຫນັ່ນ.

[2]ຈົ່ງເຜົາເຄື່ອງບູຊາຖວາຍເປັນກິ່ນຫອມຫວນຈຶ່ງເປັນທີ່ພໍໃຈພຣະຢາເວ. ດັ່ງນີ້: ງົວເຖິກໂຕຫນຶ່ງ, ແກະເຖິກໂຕຫນຶ່ງ ແລະ
ລູກແກະອາຍຸຫນຶ່ງປີເຈັດໂຕ. ສັດທັງຫມົດນັ້ນໃຫ້ເປັນສັດທີ່ມີສຸຂະພາບດີ ແລະ ບໍ່ມີຕຳຫນິ.
[3]ເຈົ້າຕ້ອງຖວາຍຍອດແປ້ງນວດນຳ້ມັນເປັນເຄື່ອງພືດຜົນບູຊາເປັນເມັດ, ຄືສຳລັບງົວເຖິກນັ້ນ, ຈົ່ງຖວາຍແປ້ງສາມໃນສິບເອຟາສຳ-
ລັບແກະຜູ້ໂຕນັ້ນ, ແມ່ນສອງໃນສິບເອຟາ,[4]ລູກແກະເຈັດໂຕ ໂຕລະຫນຶ່ງໃນສິບເອຟາ.[5]ແລະ ຖວາຍລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ
ເພື່ອລຶບລ້າງມົນທິນບາບຂອງເຈົ້າ.
[6]ໃຫ້ການຖວາຍບູຊາໃນເດືອນທີເຈັດ ໂດຍເພີ່ມໃສ່ໃນທຸກການຖວາຍບູຊາ ທີ່ເຈົ້າຈະເຮັດໃນທຸກຕົ້ນເດືອນ: ນອກເຫນືອເຄື່ອງເຜົາບູຊາປະຈຳ
ແລະ ເຄື່ອງພືດຜົນບູຊາເປັນເມັດ ແລະ ເຄື່ອງເຜົາບູຊາປະຈຳຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ ຕາມກົດລະ-
ບຽບເຄື່ອງບູຊາເຫລົ່ານີ້ ໃຫ້ເປັນກິ່ນຫອມທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແກ່ພຣະຢາເວ.
[7]ໃນວັນທີສິບເດືອນທີເຈັດນີ້ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຕ້ອງຖ່ອມໃຈລົງຖວາຍກຽດແດ່ພຣະຢາເວ. ບໍ່ຕ້ອງເຮັດວຽກຫນັກໃດໆ.
[8]ແຕ່ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາແກ່ພຣະຢາເວ. ໃຫ້ເປັນກິ່ນຫອມທີ່ພໍພຣະໄທ, ຄືຖວາຍງົວຫນຸ່ມໂຕຫນຶ່ງ, ແກະຜູ້ໂຕຫນຶ່ງ, ລູກແກະອາ-
ຍຸຫນຶ່ງປີເຈັດໂຕ. ເຈົ້າຢ່າໃຫ້ມີຕຳຫນິ.
[9]ເຈົ້າຕ້ອງຖວາຍ ຍອດແປ້ງປະສົມກັບນຳ້ມັນເປັນເຄື່ອງພືດຜົນບູຊາເປັນເມັດ, ສຳລັບງົວໂຕນັ້ນຖວາຍແປ້ງສາມໃນສິບເອຟາ, ສຳ-
ລັບແກະຜູ້ໂຕຫນຶ່ງນັ້ນແມ່ນສອງໃນສິບເອຟາ.[10]ສຳລັບລູກແກະເຈັດໂຕນັ້ນ ໂຕລະຫນຶ່ງໃນສິບເອຟາ.[11]ແລະ ຖວາຍລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູ-
ຊາໄຖ່ບາບ, ນອກເຫນືອເຄື່ອງບູຊາໄຖ່ບາບລົບລ້າງມົນທິນ ແລະ ເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາ, ແລະ ເຄື່ອງດື່ມບູຊາພ້ອມ.
[12]ໃນວັນທີສິບຫ້າເດືອນທີເຈັດ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດວຽກຫນັກ ແລະເຈົ້າຈົ່ງມີການກິນລ້ຽງເຈັດມື້ແກ່ພຣະຢາເວ.
[13]ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ, ເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທພຣະຢາເວ, ຄືງົວຫນຸ່ມສິບສາມໂຕ, ແກະຜູ້ສອງໂຕ, ລູກແກະອາ-
ຍຸຫນຶ່ງປີສິບສີ່ໂຕ, ສັດເຫລົ່ານີ້ຢ່າໃຫ້ມີຕຳຫນິ.
[14]ແລະຖວາຍຍອດແປ້ງນວດນຳ້ມັນເປັນເຄື່ອງພືດຜົນບູຊາ, ສຳລັບງົວສິບສາມໂຕ ໂຕຫນຶ່ງຖວາຍແປ້ງສາມສ່ວນສິບເອຟາ, ສຳ-
ລັບແກະຜູ້ສອງໂຕ, ໂຕລະສອງສ່ວນສິບເອຟາ.[15]ສຳລັບລູກແກະສິບສີ່ໂຕ ໂຕລະຫນຶ່ງສ່ວນສິບເອຟາ.[16]ແລະຖວາຍລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູ-
ຊາໄຖ່ບາບ, ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູຊາພ້ອມ.
[17]ໃນມື້ທີສອງ ຈົ່ງຖວາຍງົວຫນຸ່ມສິບສອງໂຕ, ແກະຜູ້ສອງໂຕ, ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[18]ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູ-
ຊາຄູ່ກັນສຳລັບງົວ, ແກະຜູ້, ແລະລູກແກະນັ້ນຕາມຈຳນວນຕາມທີ່ໄດ້ສັ່ງໄວ້.[19]ແລະຖວາຍລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ
ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາ, ແລະເຄື່ອງດື່ມບູຊາປະຈຳ.
[20]ໃນມື້ທີສາມ ຈົ່ງຖວາຍງົວສິບເອັດໂຕ, ແກະຜູ້ສອງໂຕ, ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[21]ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູ-
ຊາຄູ່ກັນ, ສຳລັບງົວ ແກະຜູ້, ແລະລູກແກະ, ຕາມຈຳນວນ ຕາມທີ່ສັ່ງໄວ້.[22]ເຈົ້າຕ້ອງຖວາຍແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ,
ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັນກັບເຄື່ອງພືດຜົນບູຊາ, ແລະເຄື່ອງດື່ມບູຊາດ້ວຍ.
[23]ໃນມື້ທີສີ່ຂອງການຊຸມນຸມຈົ່ງຖວາຍງົວສິບໂຕ, ແກະຜູ້ສອງໂຕ ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[24]ກັບເຄື່ອງພືດຜົນບູຊາ
ແລະເຄື່ອງດື່ມບູຊາຄູ່ກັນ, ສຳລັບງົວ ແກະຜູ້, ແລະລູກແກະ, ຕາມຈຳນວນ ຕາມທີ່ໄດ້ສັ່ງໄວ້.[25]ເຈົ້າຕ້ອງຖວາຍລູກແບ້ຜູ້ໂຕຫນຶ່ງເປັນເຄື່ອງບູ-
ຊາໄຖ່ບາບ, ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາ, ແລະເຄື່ອງດື່ມບູຊາດ້ວຍ.
[26]ໃນມື້ທີຫ້າ ຈົ່ງຖວາຍງົວເກົ້າໂຕ, ແກະຜູ້ສອງໂຕ, ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[27]ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູ-
ຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກແກະ ຕາມຈຳນວນ ຕາມທີ່ໄດ້ສັ່ງໄວ້.[28]ແລະຖວາຍແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ,
ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັນກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູຊາພ້ອມ.
[29]ໃນມື້ທີຫົກ ຈົ່ງຖວາຍງົວແປດໂຕ ແກະຜູ້ສອງໂຕ ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[30]ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູຊາຄູ່ກັນ,
ສຳລັບງົວ, ແກະຜູ້, ແລະລູກແກະ, ຕາມຈຳນວນ ຕາມທີ່ໄດ້ສັ່ງໄວ້.[31]ແລະຖວາຍແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ, ນອກເຫນືອເຄື່ອງເຜົາບູ-
ຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາແລະເຄື່ອງດື່ມບູຊາພ້ອມ.
[32]ນມື້ທີເຈັດ ເຈົ້າຈົ່ງຖວາຍງົວເຈັດໂຕ, ແກະຜູ້ສອງໂຕ, ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິສິບສີ່ໂຕ.[33]ກັບເຄື່ອງພືດຜົນບູຊາ, ແລະເຄື່ອງດື່ມບູ-
ຊາຄູ່ກັນ, ສຳລັບງົວ, ແກະຜູ້, ແລະລູກແກະ, ຕາມຈຳນວນ ຕາມທີ່ໄດ້ສັ່ງໄວ້.[34]ແລະຖວາຍແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ,
ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັບເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູຊາພ້ອມ.
[35]ໃນມື້ທີແປດ ເຈົ້າຈົ່ງມີການປະຊຸມອັນສັກສິດ ເຈົ້າຢ່າເຮັດວຽກຫນັກ.[36]ແຕ່ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເຄື່ອງບູຊາດ້ວຍໄຟ,
ໃຫ້ເປັນກິ່ນຫອມທີ່ພໍພຣະໄທພຣະຢາເລ, ຄືງົວເຖິກໂຕຫນຶ່ງ, ແກະຜູ້ໂຕຫນຶ່ງ, ລູກແກະອາຍຸຫນຶ່ງປີບໍ່ມີຕຳຫນິເຈັດໂຕ.
[37]ແລະຖວາຍເຄື່ອງພືດຜົນບູຊາ ແລະເຄື່ອງດື່ມບູຊາຄູ່ກັນ, ສຳລັບງົວ, ແກະຜູ້, ແລະລູກແກະ, ຕາມຈຳນວນ, ຕາມທີ່ໄດ້ສັ່ງໄວ້.
[38]ແລະຖວາຍແບ້ຜູ້ໂຕຫນຶ່ງເປັນເຄື່ອງບູຊາໄຖ່ບາບ, ນອກເຫນືອເຄື່ອງເຜົາບູຊາປະຈຳ, ຊຶ່ງຄູ່ກັນກັບເຄື່ອງພືດຜົນບູຊາ, ແລະເຄື່ອງດື່ມບູຊາດ້ວຍ.
[39]ສິ່ງເຫລົ່ານີ້ພວກເຈົ້າຈົ່ງຖວາຍແກ່ພຣະຢາເວຕາມເທດສະການກຳນົດຂອງເຈົ້າ, ເພີ່ມເຂົ້າກັບການຖວາຍຕາມຄຳປະຕິຍານຂອງເຈົ້າ,
ແລະການຖວາຍດ້ວຍໃຈສະຫມັກຂອງເຈົ້າ, ເປັນເຄື່ອງເຜົາບູຊາ ເຄື່ອງພືດຜົນບູຊາ, ເຄື່ອງດື່ມບູຊາ, ແລະເຄື່ອງສັນຕິບູຊາຂອງເຈົ້າ”[40]ສະນັ້ນ
ໂມເຊ ຈຶ່ງໄດ້ບອກປະຊາຊົນອິດສະຣາເອນ ທຸກສິ່ງຕາມທີ່ພຣະຢາເວ ໄດ້ສັ່ງເພິ່ນໄວ້ທຸກປະການ.


generated on Tue Jun 17 19:01:42 2025

30 [1]ໂມເຊໄດ້ເວົ້າກັບຫົວຫນ້າຕະກຸນກ່ຽວກັບຄົນອິສຣາເອນວ່າ,[2]"ເມື່ອຊາຍຜູ້ໃດປະຕິຍານໄວ້ກັບພຣະຢາເວ, ຫລືໃຫ້ປະຕິ-
ຍານຜູກມັດຕົວໄວ້ດ້ວຍຄຳສັນຍາ, ຢ່າງຫນຶ່ງຢ່າງໃດ ຢ່າໃຫ້ລາວເສຍສັດຈະ. ລາວຕ້ອງເຮັດຕາມຄຳທີ່ອອກຈາກປາກຂອງລາວທັງຫມົດ.

[3]ຫລືເມື່ອຍິງຄົນຫນຶ່ງຄົນໃດປະຕິຍານໄວ້ແກ່ພຣະຢາເວ ແລະຜູກມັດຕົວເອງໄວ້ດ້ວຍຄຳສັນຍາ ເມື່ອນາງຍັງສາວຢູ່ໃນເຮືອນຂອງພໍ່,
[4]ແລະຖ້າພໍ່ຂອງນາງໄດ້ຍິນຄຳທີ່ນາງປະຕິຍານໄວ້ ແລະຄຳສັນຍາທີ່ນາງຜູກມັດຕົວເອງ, ແຕ່ບໍ່ໄດ້ເວົ້າຫຍັງກັບນາງ ກໍໃຫ້ຄຳທີ່ປະຕິ-
ຍານໄວ້ນັ້ນຄົງຢູ່, ແລະໃຫ້ຄຳສັນຍາທີ່ຜູກມັດນາງໄວ້ນັ້ນຄົງຢູ່.
[5]ແຕ່ຖ້າພໍ່ຂອງນາງຄັດຄ້ານໃນມື້ທີ່ລາວໄດ້ຍິນນັ້ນ ການທີ່ນາງປະຕິຍານໄວ້ກໍດີ, ຄຳສັນຍາທີ່ຜູກມັດນາງໄວ້ກໍດີ, ຈະຫມົດໄປນຳ ແລະພຣະຜູ້-
ເປັນເຈົ້າຈະຊົງອະໄພໃຫ້ແກ່ນາງ, ເພາະພໍ່ຂອງນາງໄດ້ຄັດຄ້ານນາງໄວ້.
[6]ແລະຖ້ານາງແຕ່ງງານມີຜົວແລ້ວ ສິ່ງທີ່ນາງປະຕິຍານໄວ້ ຫລືກ່າວດ້ວຍຮີມປາກທີ່ບໍ່ທັນຄິດຊຶ່ງຜູກມັດນາງ;[7]ຝ່າຍຜົວກໍໄດ້ຍິນແລ້ວ
ແລະໃນມື້ທີ່ໄດ້ຍິນ ລາວກໍບໍ່ໄດ້ເວົ້າຫຍັງກັບນາງ ສິ່ງທີ່ນາງປະຕິຍານໄວ້ນັ້ນ ແລະຄຳສັນຍາທີ່ຜູກມັດນາງຈະຍັງຢູ່.
[8]ແຕ່ຖ້າໃນມື້ນັ້ນຄືຜົວມາໄດ້ຍິນນາງ ແລະລາວຄັດຄ້ານ, ກໍໃຫ້ຄຳທີ່ນາງປະຕິຍານໄວ້ນັ້ນເປັນໂມຄະ, ທັງຄຳກ່າວດ້ວຍຮີມ-
ປາກທີ່ບໍ່ທັນຄິດຂອງນາງ ຊຶ່ງຜູກມັດນາງນັ້ນກໍເປັນໂມຄະດ້ວຍ, ແລະພຣະຢາເວຈະອະໄພໃຫ້ແກ່ນາງ
[9]ແຕ່ຄຳປະຕິຍານທີ່ແມ່ຫມ້າຍ ຫລືແມ່ຮ້າງໃຫ້ໄວ້, ຫລືຄຳໃດທີ່ນາງເວົ້າຜູກມັດຕົນເອງ ຄຳເວົ້ານັ້ນຈະຍັງຢູ່.[10]ແລະຖ້ານາງປະຕິ-
ຍານໄວ້ໃນເຮືອນຂອງຜົວນາງ ຫລືໃຫ້ສັນຍາດ້ວຍຜູກມັດຕົນເອງໄວ້,[11]ແລະຜົວຂອງນາງໄດ້ຍິນແລ້ວ, ແຕ່ບໍ່ເວົ້າຫຍັງແກ່ນາງ ແລະບໍ່ຄັດ-
ຄ້ານນາງ, ຄຳປະຕິຍານຂອງນາງທັງຫມົດຈະຍັງຢູ່ ແລະຄຳສັນຍາທຸກຢ່າງຊຶ່ງນາງຜູກມັດຕົວເອງຈະຍັງຢູ່ເຊັ່ນກັນ.
[12]ແຕ່ຖ້າຜົວຂອງນາງໄດ້ເຮັດໃຫ້ເປັນໂມຄະໃນມື້ທີ່ລາວໄດ້ຍິນແລ້ວ, ສິ່ງໃດທີ່ອອກຈາກຮີມປາກຂອງນາງກ່ຽວດ້ວຍຄຳປະຕິຍານ ຫລືຄຳສັນ-
ຍາຂອງນາງກໍຈະເປັນໂມຄະ. ຜົວຂອງນາງໄດ້ເຮັດໃຫ້ເປັນໂມຄະ. ແລະພຣະຢາເວຈະຊົງອະໄພໃຫ້ແກ່ນາງ.
[13]ຄຳປະຕິຍານທັງຫມົດທີ່ເຮັດໃຫ້ນາງຖ່ອມໃຈເອງ ຜົວຂອງນາງສາມາດເຮັດໃຫ້ຄົງຢູ່ ຫລື ເປັນໂມຄະໄດ້.
[14]ແຕ່ຖ້າຜົວຂອງນາງບໍ່ກ່າວສິ່ງໃດແກ່ນາງ ລາວຍ່ອມເຮັດໃຫ້ຄຳປະຕິຍານ ແລະຄຳສັນຍາທັງຫມົດຂອງນາງ. ຊຶ່ງຈະຕົກແກ່ນາງໃຫ້ຍັງຢູ່
ເພາະລາວບໍ່ເວົ້າສິ່ງໃດໃນມື້ທີ່ລາວໄດ້ຍິນ ລາວຈຶ່ງເຮັດໃຫ້ຄົງຢູ່.
[15]ແຕ່ຖ້າພາຍຫລັງທີ່ລາວໄດ້ຍິນ ແລ້ວມາເຮັດໃຫ້ເປັນໂມຄະ ລາວຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງນາງ.[16]ຂໍ້ຄວາມເຫລົ່ານີ້ເປັນກົດ-
ເກນຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້ເປັນເລື່ອງລະຫວ່າງຜົວກັບເມຍຂອງລາວ ເລື່ອງລະຫວ່າງພໍ່ກັບລູກສາວ ໃນຂະນະທີ່ນາງຍັງເປັນສາວຢູ່
ຄືຍັງຢູ່ໃນເຮືອນພໍ່ຂອງນາງ.


generated on Tue Jun 17 19:01:42 2025

31 1ອົງພຣະຢາເວໄດ້ກ່າວຕໍ່ໂມເຊ ວ່າ,2"ຈົ່ງແກ້ແຄ້ນຄົນມີດີອານເພື່ອຄົນອິສຣາເອນ ແລ້ວພາຍຫລັງເຈົ້າຈະຕາຍໄປຢູ່ກັບປະຊາຊົນຂອງເຈົ້າ"
3ແລະໂມເຊກ່າວກັບປະຊາຊົນວ່າ "ຈົ່ງຕຽມຄົນບາງຄົນໃນພວກເຈົ້າໃຫ້ພ້ອມດ້ວຍອາວຸດ ເພື່ອເຮັດສົງຄາມ ແລ້ວຍົກໄປສູ້ພວກມີດີ-
ອານເພື່ອການແກ້ແຄ້ນຂອງພຣະຢາເວຕໍ່ຄົນມີດີອານ.4ເຈົ້າຈົ່ງສົ່ງຄົນຈາກຕະກຸນອິສຣາເອນທັງຫມົດ ຕະກຸນລະພັນຄົນເຂົ້າຮ່ວມສົງຄາມ."5ດັ່ງ-
ນັ້ນ ພວກເຂົາຈຶ່ງຈັດຄົນຈາກອິສຣາເອນທີ່ນັບພັນ ຕະກຸນລະພັນຄົນ ເປັນຄົນຫມື່ນສອງພັນພ້ອມດ້ວຍອາວຸດເພື່ອເຂົ້າສົງຄາມ.
6ແລະໂມເຊສົ່ງຄົນຕະກຸນລະພັນຄົນອອກໄປຕໍ່ສູ້, ທັງຄົນເຫລົ່ານັ້ນກັບຟີເນຮາດລູກຊາຍເອເລອາຊາໄປເຮັດສົງຄາມ, ພ້ອມກັບເຄື່ອງໃຊ້ອັນບໍລິ-
ສຸດ ແລະມີແກປຸກຢູ່ໃນມື.7ພວກເຂົາ ໄດ້ເຂົ້າໂຈມຕີພວກມີດີອານ ຕາມທີ່ອົງພຣະ ຜູ້ເປັນເຈົ້າໄດ້ສັ່ງໂມເຊໄວ້ ແລະ ຂ້າຜູ້ຊາຍ ທຸກຄົນຖິ້ມ.
8ພວກເຂົາໄດ້ປະຫານຊີວິດບັນດາກະສັດຄົນມີດີອານພ້ອມກັບຄົນອື່ນທີ່ພວກເຂົາຂ້າ ມີເອວີ, ເຣເກັມ, ຊູເຣ, ຮູເຣ, ແລະເຣບາ, ກະ-
ສັດທັງຫ້າອົງຂອງຄົນມີດີອານ. ແລະໄດ້ປະຫານຊີວິດບາລາອາມລູກຊາຍເບໂອ, ດ້ວຍດາບ.
9ແລະຄົນອິສຣາເອນໄດ້ຈັບຜູ້ຍິງຊາວມີດີອານທັງຫມົດມາເປັນຊະເລີຍ ພ້ອມກັບພວກເດັກນ້ອຍທັງຫລາຍ,
ແລະກວາດເອົາຝູງງົວຝູງແບ້ແກະແລະເຄື່ອງຂອງທັງປວງໄປຫມົດ. ຊຶ່ງເປັນຊັບທີ່ປຸ້ນມາໄດ້.10ແລະເອົາໄຟເຜົາບັນດາເມືອງທີ່ອາ-
ໄສຂອງພວກເຂົາ ແລະເຜົາຄ້າຍທັງຫມົດຂອງພວກເຂົາດ້ວຍ.
11ແລ້ວເກັບບັນດາເຄື່ອງທີ່ຍຶດໄດ້, ແລະຊັບທີ່ປຸ້ນມາໄດ້ທັງຄົນ ແລະສັດໄປຫມົດ.12ແລ້ວພວກເຂົານໍາຊະເລີຍ,
ແລະຊັບສິນທີ່ປຸ້ນໄດ້ກັບເຄື່ອງທີ່ຍຶດໄດ້ທັງຫມົດມາຫາໂມເຊ,ແລະເອເລອາຊາແລະຊຸມນຸມຊົນອິສຣາເອນທີ່ຄ້າຍ ໃນທົ່ງພຽງໂມອາບ, ແຄມແມ່-
ນໍ້າຢໍແດນໃກ້ເມືອງເຢຣີໂກ.
13ໂມເຊ, ແລະເອເລອາຊາ ປະໂລຫິດ, ແລະບັນດາຜູ້ນໍາແຫ່ງຊຸມນຸມຊົນອອກໄປຕ້ອນຮັບພວກເຂົານອກຄ້າຍ.14ໂມເຊຮ້າຍພວກນາຍທະຫານ,
ຄືນາຍພັນ ແລະນາຍຮ້ອຍ, ຜູ້ກັບຈາກການເຮັດສົງຄາມ,15"ໂມເຊເວົ້າກັບພວກເຂົາວ່າ "ເຈົ້າທັງຫລາຍໄດ້ໄວ້ຊີວິດພວກຜູ້ຍິງທັງຫມົດຫລື?
16ບົງແມ ຍ້ອນຄໍາປຶກສາຂອງບາລາອາມ ຍິງເຫລົ່ານີ້ຈຶ່ງໄດ້ເຮັດໃຫ້ຄົນອິສຣາເອນ, ຫລົງລະເມີດຕໍ່ພຣະຢາເວໃນເລື່ອງເປໂອ ແລະໄພພິ-
ບັດຈຶ່ງໄດ້ເກີດຂຶ້ນທ່າມກາງຊຸມນຸມຊົນຂອງພຣະຜູ້ເປັນເຈົ້າ.17ບັດນີ້, ຈົ່ງປະຫານຊີວິດເດັກນ້ອຍຜູ້ຊາຍທຸກຄົນ, ແລະປະຫານຊີວິດຜູ້-
ຍິງທີ່ເຄີຍນອນຮ່ວມກັບຊາຍທຸກຄົນ.
18ແຕ່ຈົ່ງໄວ້ຊີວິດເດັກຜູ້ຍິງທີ່ຍັງບໍ່ເຄີຍນອນຮ່ວມກັບຊາຍໄວ້ສໍາລັບເຈົ້າທັງຫລາຍເອງ.19ຈົ່ງຢູ່ພາຍນອກຄ້າຍເຈັດມື້, ຜູ້ໃດທີ່ໄດ້ຂ້າຄົນ,
ແລະຜູ້ໃດທີ່ໄດ້ແຕະຕ້ອງຜູ້ທີ່ຖືກຂ້າ, ຈົ່ງຊໍາລະຕົວ, ແລະຊະເລີຍຂອງຕົນເອງໃນມື້ທີສາມ ແລະມື້ທີເຈັດ.20ເຈົ້າຕ້ອງຊໍາ-
ລະເຄື່ອງແຕ່ງກາຍທຸກສ່ວນ, ເຄື່ອງຫນັງສັດທຸກສ່ວນ, ແລະເຄື່ອງຂົນແບ້ທັງຫມົດ, ແລະເຄື່ອງທີ່ເຮັດດ້ວຍໄມ້ທຸກສ່ວນ."
21ແລະເອເລອາຊາ ປະໂລຫິດໄດ້ກ່າວແກ່ທະຫານຜູ້ອອກໄປເຮັດສົງຄາມວ່າ, "ນີ້ເປັນກົດບັນຍັດຊຶ່ງພຣະຢາເວໄດ້ສັ່ງໂມເຊໄວ້.22ສະເພາະທອງ-
ຄໍາ, ເງິນ, ທອງສໍາລິດ, ເຫລັກ, ດີບຸກ, ແລະຊືນ.23ທຸກສິ່ງທີ່ທົນໄຟໄດ້ ພວກເຈົ້າຈົ່ງລວກດ້ວຍໄຟ, ແລ້ວຈະສະອາດ ຢ່າງໃດກໍດີ ຕ້ອງຊໍາ-
ລະດ້ວຍນໍ້າລ້າງມົນທິນ, ແລະສິ່ງໃດທີ່ທົນໄຟບໍ່ໄດ້ເຈົ້າຕ້ອງໃຫ້ຜ່ານນໍ້າ.24ເຈົ້າຕ້ອງຊັກເສື້ອຜ້າຂອງເຈົ້າໃນມື້ທີເຈັດ ແລະເຈົ້າຈະສະອາດ.
ຫລັງຈາກນັ້ນ ເຈົ້າຈຶ່ງຈະເຂົ້າມາໃນຄ້າຍໄດ້."
25ແລ້ວພຣະຢາເວໄດ້ບອກ ໂມເຊ ວ່າ,26"ເຈົ້າ ແລະເອເລອາຊາຜູ້ເປັນປະໂຣຫິດ, ກັບບັນດາຜູ້ນໍາຂອງຊຸມນຸມຊົນ, ຈົ່ງນັບສິ່ງຂອງທີ່ໄດ້ມາທັງຄົນ
ແລະສັດ.27ແລະແບ່ງສິ່ງຂອງເຫລົ່ານັ້ນອອກເປັນສອງສ່ວນ, ໃຫ້ທະຫານຜູ້ອອກໄປເຮັດສົງຄາມສ່ວນຫນຶ່ງ, ແລະໃຫ້ບັນດາຊຸມນຸມ-
ຊົນອີກສ່ວນຫນຶ່ງ.
28ແລະຈົ່ງຫັກເອົາສ່ວນຫນຶ່ງຈາກທະຫານທີ່ອອກໄປເຮັດສົງຄາມເປັນຂອງຖວາຍແກ່ພຣະຢາເວ, ຫ້າຮ້ອຍຫັກຫນຶ່ງ, ທັງຄົນ ແລະງົວ ແລະ ລໍ
ແລະຝູງແບ້ ແກະ.29ຈົ່ງເອົາຈາກເຄິ່ງສ່ວນຂອງພວກເຂົາ ມອບໃຫ້ແກ່ເອເລອາຊາ ຜູ້ເປັນປະໂຣຫິດ, ເປັນເຄື່ອງບູຊາແກ່ເອົາ.
30ແລະຈາກເຄິ່ງສ່ວນຂອງຄົນອິສຣາເອນນັ້ນ, ເຈົ້າຈົ່ງນໍາຫ້າສິບຫັກຫນຶ່ງຈາກຄົນ, ຝູງງົວ, ຝູງລໍ, ແລະຝູງແບ້ແກະ, ແລະສັດທັງຫມົດ
ມອບໃຫ້ແກ່ຄົນເລວີຜູ້ເບິ່ງແຍງຫໍເຕັນສັກສິດຂອງພຣະຜູ້ເປັນເຈົ້າ."31ແລະໂມເຊກັບເອເລອາຊາ, ປະໂລ-
ຫິດໄດ້ເຮັດຕາມທີ່ພຣະຢາເວຊົງສັ່ງແກ່ໂມເຊ.
32ບັນດາຊັບທີ່ປຸ້ນມາໄດ້ ອັນເຫລືອຈາກສິ່ງທີ່ທະຫານຍຶດມານັ້ນ ຄື: ແກະຫົກແສນເຈັດຫມື່ນຫ້າພັນໂຕ,33ງົວເຈັດຫມື່ນສອງພັນໂຕ,
34ລໍຫົກຫມື່ນຫນຶ່ງພັນໂຕ,35ແລະຄົນ ຄືຜູ້ຍິງທີ່ຍັງບໍ່ເຄີຍນອນຮ່ວມກັບຊາຍ ທັງຫມົດມີສາມຫມື່ນສອງພັນຄົນ.
36ແລະໃນເຄິ່ງສ່ວນຂອງຄົນທີ່ອອກໄປເຮັດສົງຄາມ ມີແກະສາມແສນສາມຫມື່ນເຈັດພັນຫ້າຮ້ອຍໂຕ.37ສ່ວນແກະທີ່ເປັນຂອງພຣະ-
ຢາເວມີຫົກຮ້ອຍເຈັດສິບຫ້າໂຕ.38ມີງົວສາມຫມື່ນຫົກພັນໂຕ ງົວທີ່ເປັນສ່ວນຂອງພຣະຜູ້ເປັນເຈົ້າເຈັດສິບສອງໂຕ.
39ມີລໍ 30,500 ໂຕ, ຊຶ່ງເປັນສ່ວນຂອງພຣະຢາເວຫົກສິບເອັດໂຕ40ສ່ວນຄົນມີຫນຶ່ງຫມື່ນຫົກພັນຄົນ, ຊຶ່ງເປັນສ່ວນຂອງພຣະຜູ້ເປັນ-
ເຈົ້າສາມສິບສອງຄົນ.41ໂມເຊໄດ້ມອບສ່ວນທີ່ໄດ້ມາຊຶ່ງເປັນຂອງພິເສດຖວາຍແກ່ພຣະຢາເວນັ້ນ. ມອບໃຫ້ແກ່ເອເລອາຊາຕາມທີ່ພຣະ-
ຢາເວຊົງສັ່ງໄວ້ກັບໂມເຊ.
42ຈາກເຄິ່ງສ່ວນຂອງຄົນອິສຣາເອນຊຶ່ງໂມເຊໄດ້ແບ່ງມາຈາກສ່ວນທີ່ທະຫານໄປເຮັດສົງຄາມໄດ້ນັ້ນ.43(ເຄິ່ງສ່ວນຂອງຊຸມນຸມຊົນ ຄື
ແກະສາມແສນສາມຫມື່ນເຈັດພັນຫ້າຮ້ອຍໂຕ,44ງົວສາມຫມື່ນຫົກພັນໂຕ.45ລໍສາມຫມື່ນຫ້າຮ້ອຍໂຕ.46ແລະຄົນຫນຶ່ງຫມື່ນຫົກພັນຄົນ).
47ຈາກເຄິ່ງສ່ວນຂອງຄົນອິສຣາເອນນັ້ນ, ໂມເຊໄດ້ເອົາຫນຶ່ງສ່ວນຫ້າສິບ, ທັງຄົນ ແລະສັດ, ມອບໃຫ້ແກ່ຄົນເລວີຜູ້ເບິ່ງແຍງຫໍເຕັນສັກ-
ສິດຂອງພຣະຢາເວ. ດັ່ງທີ່ພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້.
48ແລ້ວນາຍທະຫານຜູ້ບັງຄັບກອງພັນທັງປວງ, ຄືນາຍພັນນາຍຮ້ອຍໄດ້ເຂົ້າມາຫາໂມເຊ.49ແລະກ່າວແກ່ໂມເຊວ່າ,
"ຄົນໃຊ້ຂອງທ່ານໄດ້ກວດນັບທະຫານຜູ້ຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍ, ແລ້ວບໍ່ມີຄົນຫາຍໄປຈັກຄົນດຽວ.
50ແລະຂ້ານ້ອຍໄດ້ນໍາສ່ວນທີ່ຖວາຍແກ່ພຣະຜູ້ເປັນເຈົ້າ, ຊຶ່ງຕ່າງຄົນຕ່າງໄດ້ມາ, ຄື ສິ່ງທີ່ເຮັດດ້ວຍທອງຄໍາ, ມີປອກຂາ, ແລະສາຍຄໍ ແຫວນ,
ຕຸ້ມຫູ, ແລະປອກແຂນ, ເພື່ອເຮັດການລົບລ້າງມົນທິນບາບຂອງພວກເຮົາທັງຫລາຍຕໍ່ພຣະພັກພຣະຢາເວ"51ໂມເຊແລະເອເລອາ-
ຊາກໍຮັບເອົາບັນດາສິ່ງຂອງທີ່ເຮັດດ້ວຍທອງຄໍາຈາກພວກເຂົາ.


generated on Tue Jun 17 19:01:42 2025

[52]ແລະທອງຄຳທັງຫມົດຈາກເຄື່ອງຖວາຍ, ຊຶ່ງພວກເຂົາໄດ້ຖວາຍແກ່ພຣະຢາເວ, ຈາກນາຍພັນ ແລະນາຍຮ້ອຍ ມີນໍ້າຫນັກ16,750 ເຊເຂ.
[53](ທະຫານເຫລົ່ານັ້ນຕ່າງຄົນຕ່າງກໍໄດ້ເກັບເຄື່ອງຂອງຂອງຂ້າເສິກມານຳ). [54]ໂມເຊແລະເອເລອາຊາ ໄດ້ຮັບທອງຄຳຈາກນາຍພັນນາຍຮ້ອຍ.
ນຳມາໃນຫໍເຕັນສັກສິດແຫ່ງຊຸມນຸມ ເປັນທີ່ລະນຶກແກ່ຄົນອິສຣາເອນຕໍ່ພຣະພັກພຣະຜູ້ເປັນເຈົ້າ.

 generated on Tue Jun 17 19:01:42 2025

32 1ຄົນຣູເບັນແລະຄົນກາດມີຝູງງົວເປັນຈຳນວນຫລາຍ. ພວກເຂົາໄດ້ເຫັນແຜ່ນດິນຢາເຊແລະແຜ່ນດິນກີເລອາດ,
ບ່ອນນັ້ນເປັນບ່ອນທີ່ເຫມາະແກ່ຝູງສັດ. 2ດັ່ງນັ້ນ ຄົນກາດແລະຄົນຣູເບັນຈຶ່ງມາຫາໂມເຊ, ແລະເອເລອາ-
ຊາທີ່ເປັນປະໂຣຫິດແລະຜູ້ນຳຂອງຊຸມນຸມຊົນກ່າວວ່າ, 3" ນີ້ຄືລາຍຊື່ຂອງທີ່ຕ່າງໆທີ່ເຮົາໄດ້ສຳຫລວດເບິ່ງຄື: ອາຕາໂຣດ, ດີໂບນ, ຢາເຊ, ນິມ-
ຣາ, ເຮັດຊະໂບນ, ເອເລອາເລ, ເສບາມ, ເນໂບ, ແລະເບໂອນ.

4ເປັນແຜ່ນດິນຊຶ່ງພຣະຢາເວ ຊົງທຳລາຍຕໍ່ຫນ້າຄົນອິສຣາເອນ, ເປັນແຜ່ນດິນເຫມາະກັບຝູງສັດ, ແລະຄົນໃຊ້ຂອງທ່ານ,
ມີຝູງງົວຈຳນວນຫລາຍ" 5ແລະພວກເຂົາທັງຫລາຍກ່າວວ່າ, "ຖ້າຂ້ານ້ອຍທັງຫລາຍເປັນທີ່ພໍໃຈໃນສາຍຕາຂອງທ່ານ, ຂໍມອບແຜ່ນດິນນີ້ເປັນກຳ-
ມະສິດແກ່ຄົນໃຊ້ຂອງທ່ານ, ຂໍຢ່າພາຂ້ານ້ອຍທັງຫລາຍຂ້າມແມ່ນ້ຳຢໍແດນໄປເລີຍ"
6ແຕ່ໂມເຊເວົ້າກັບຄົນກາດແລະຄົນຣູເບັນວ່າ, "ຄວນໃຫ້ພີ່ນ້ອງຂອງເຈົ້າໄປເຮັດສົງຄາມ, ແຕ່ຝ່າຍພວກເຈົ້າຈະຄອຍຢູ່ບ່ອນນີ້ແບບນັ້ນບໍ?
7ເປັນຫຍັງເຈົ້າທັງຫລາຍເຮັດໃຫ້ຈິດໃຈຂອງຄົນອິສຣາເອນທໍ້ຖອຍທີ່ຈະຍົກຂ້າມໄປຍັງແຜ່ນດິນຊຶ່ງພຣະຢາເວໄດ້ຊົງປະທານແກ່ພວກເຂົາ?
8ພໍ່ຂອງເຈົ້າທັງຫລາຍໄດ້ເຮັດເຊັ່ນນີ້ ຕອນທີ່ເຮົາໄດ້ໃຊ້ພວກເຂົາໄປຈາກກາເດັດ-ບາເນອາ ໃຫ້ສອດແນມເບິ່ງແຜ່ນດິນນັ້ນ.
9ເມື່ອພວກເຂົາຂຶ້ນໄປຍັງພູເຂົາເອັດຊະໂຄນ, ແລະໄດ້ເຫັນແຜ່ນດິນນັ້ນແລ້ວ ພວກເຂົາກໍເຮັດໃຫ້ຈິດໃຈຄົນອິສຣາເອນທໍ້-
ຖອຍທີ່ຈະຍົກເຂົ້າໄປໃນແຜ່ນດິນຊຶ່ງພຣະຢາເວ ໄດ້ຊົງປະທານແກ່ພວກເຂົາ.
10ໃນມື້ນັ້ນ ພຣະຜູ້ເປັນເຈົ້າຊົງໂກດຮ້າຍພວກເຂົາຢ່າງຫນັກ ພຣະອົງຊົງປະຕິຍານໄວ້ວ່າ: 11''ແນ່ນອນທີ່ສຸດ ທຸກຄົນທີ່ໄດ້ອົບພະຍົບອອກຈາກເອ-
ຢິບອາຍຸຕັ້ງແຕ່ຊາວປີຂຶ້ນໄປຈະບໍ່ໄດ້ເຫັນແຜ່ນດິນຊຶ່ງເຮົາໄດ້ສັນຍາວ່າຈະມອບໃຫ້ອັບຣາຮາມ, ອີຊາກ, ແລະຢາໂຄບ, ເພາະພວກເຂົາບໍ່ໄດ້ຕິດ-
ຕາມເຮົາດ້ວຍໃຈຈິງ. 12ເວັ້ນແຕ່ກາເລັບລູກຊາຍເຢຟຸນເນຄົນເກນິດຊີ, ແລະໂຢຊວຍລູກຊາຍນູນ. ເພາະວ່າພວກເຂົາທັງສອງຕິດ-
ຕາມເຮົາດ້ວຍໃຈຈິງ'.
13ແລະພຣະຜູ້ເປັນເຈົ້າຊົງໂກດຮ້າຍຕໍ່ອິສຣາເອນ, ພຣະອົງຈຶ່ງຊົງໃຫ້ພວກເຂົາພະເນຈອນຢູ່ໃນຖິ່ນແຫ້ງແລ້ງກັນດານສີ່ສິບປີ,
ຈົນລຸ້ນພວກທີ່ເຮັດຜິດໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າຕາຍໄປຈົນຫມົດ. 14ແລະເບິ່ງແມ, ເຈົ້າໄດ້ເຕີບໃຫຍ່ຂຶ້ນມາແທນພໍ່ຂອງເຈົ້າ,
ເປັນເຊື້ອສາຍຄົນບາບທີ່ຈະເພີ່ມທະວີພຣະພິໂລດຂອງພຣະຜູ້ເປັນເຈົ້າຕໍ່ອິສຣາເອນໃຫ້ຫລາຍຍິ່ງຂຶ້ນ. 15ເພາະວ່າຖ້າເຈົ້າທັງ-
ຫລາຍຫັນຫນີຈາກການຕິດຕາມພຣະອົງ, ພຣະອົງຈະຊົງປະຖິ້ມພວກເຈົ້າໃນຖິ່ນແຫ້ງແລ້ງກັນດານອີກ, ແລະເຈົ້າທັງຫລາຍຈະທຳ-
ລາຍຊົນຊາດທັງຫມົດນີ້"
16ແລ້ວພວກເຂົາເຂົ້າມາໃກ້ໂມເຊກ່າວວ່າ, " ຂ້ານ້ອຍທັງຫລາຍຈະສ້າງຄອກສຳລັບຝູງແບ້ແກະບ່ອນນີ້, ແລະສ້າງເມືອງສຳ-
ລັບຄອບຄົວຂອງເຮົາທັງຫລາຍ. 17ແຕ່ເຮົາທັງຫລາຍຈະຖືອາວຸດພ້ອມທີ່ຈະໄປຂ້າງຫນ້າຄົນອິສຣາເອນຈົນກວ່າເຮົາທັງ-
ຫລາຍຈະນຳພວກເຂົາໄປເຖິງບ່ອນຂອງພວກເຂົາ. ຄອບຄົວຂອງເຮົາຈະໄດ້ຢູ່ໃນເມືອງທີ່ມີກຳແພງອ້ອມຮອບ ເພາະຢ້ານຊາວແຜ່ນດິນນີ້.
18ເຮົາທັງຫລາຍຈະບໍ່ຍອມກັບເຮືອນຈົນກວ່າຄົນອິສຣາເອນຈະໄດ້ຮັບມໍລະດົກຂອງພວກເຂົາທຸກຄົນ. 19ເພາະເຮົາຈະບໍ່ໄດ້ຮັບມໍລະ-
ດົກກັບພວກເຂົາຊຶ່ງຢູ່ຟາກແມ່ນ້ຳຢໍແດນແລະຕໍ່ອອກໄປ ເພາະວ່າມໍລະດົກທີ່ຕົກທອດມາເຖິງເຮົາກໍຢູ່ຟາກແມ່ນ້ຳຢໍແດນ, ເບື້ອງຕາເວັນອອກນີ້."
20ໂມເຊຈຶ່ງກ່າວແກ່ພວກເຂົາວ່າ, "ຖ້າເຈົ້າທັງຫລາຍຈະເຮັດເຊັ່ນນີ້, ຄືຈັບອາວຸດຂຶ້ນເຂົ້າສູ່ສົງຄາມຕໍ່ພຣະພັກພຣະຢາເວ. 21ຈະຂ້າມແມ່ນ້ຳຢໍ-
ແດນໄປຕໍ່ພຣະພັກພຣະຜູ້ເປັນເຈົ້າ. ຈົນກວ່າພຣະອົງຈະຊົງຂັບໄລ່ສັດຕູໃຫ້ພົ້ນພຣະອົງ. 22ແລະແຜ່ນດິນນັ້ນຈະພ່າຍແພ້ຕໍ່ພຣະພັກພຣະອົງແລ້ວ.
ພາຍຫລັງເຈົ້າຈຶ່ງຈະກັບ. ແລະພົ້ນຈາກພັນທະທີ່ມີຕໍ່ພຣະຢາເວ ແລະຊາວອິສຣາເອນ. ແລະແຜ່ນດິນນີ້ຈະຕົກເປັນກຳມະສິດຂອງເຈົ້າຕໍ່ພຣະ-
ພັກພຣະຢາເວ.
23ແຕ່ຖ້າເຈົ້າທັງຫລາຍບໍ່ໄດ້ເຮັດເຊັ່ນນີ້, ເບິ່ງແມ, ເຈົ້າທັງຫລາຍໄດ້ເຮັດບາບຕໍ່ພຣະຢາເວ. ຈົ່ງຮູ້ໄວ້ວ່າ ບາບຂອງທ່ານກໍຈະໄລ່ຕາມທັນ.
24ຈົ່ງສ້າງເມືອງສຳລັບຄອບຄົວທັງຫລາຍຂອງເຈົ້າ ແລະສ້າງຄອກສຳລັບແບ້ແກະຂອງເຈົ້າ
ແລະເຮັດຕາມຄຳທີ່ອອກຈາກປາກຂອງເຈົ້າ." 25ຄົນກາດກັບຄົນຣູເບັນຈຶ່ງກ່າວແກ່ໂມເຊວ່າ "ຄົນໃຊ້ຂອງທ່ານຈະເຮັດດັ່ງທີ່ເຈົ້ານາຍຂອງຂ້າ-
ນ້ອຍບັນຊາ.
26ເດັກນ້ອຍທັງຫລາຍ, ເມຍທັງຫລາຍ, ຝູງສັດດ ແລະສັດໃຊ້ທັງຫມົດຂອງພວກເຮົາ, ຈະຢູ່ບ່ອນນີ້ໃນເມືອງກີເລອາດ.
27ແຕ່ຄົນໃຊ້ຂອງທ່ານທຸກຄົນ, ຜູ້ມີອາວຸດເຮັດສົງຄາມຈະຂ້າມໄປ, ເພື່ອສູ້ຮົບຕໍ່ພຣະພັກພຣະຜູ້ເປັນເຈົ້າ, ດັ່ງທີ່ເຈົ້ານາຍຂອງຂ້ານ້ອຍສັ່ງ."
28ກ່ຽວກັບເລື່ອງພວກເຂົານີ້ໂມເຊຈຶ່ງອອກຄຳສັ່ງແກ່ເອເລອາຊາ, ແລະໂຢຊວຍລູກຊາຍນູນ, ແລະແກ່ຫົວຫນ້າຕະກຸນຂອງຄົນອິສຣາເອນ,
29"ແລະໂມເຊກ່າວແກ່ພວກເຂົາວ່າ "ຖ້າຄົນກາດແລະຄົນຣູເບັນທຸກຄົນຜູ້ມີອາວຸດທີ່ຈະເຮັດສົງຄາມຕໍ່ພຣະພັກພຣະຜູ້ເປັນເຈົ້າ ຈະຂ້າມແມ່-
ນ້ຳຢໍແດນໄປພ້ອມກັບເຈົ້າທັງຫລາຍ ແລະແຜ່ນດິນນັ້ນຈະພ່າຍແພ້ຕໍ່ຫນ້າເຈົ້າແລ້ວ, ເຈົ້າຈົ່ງມອບແຜ່ນດິນກີເລອາດໃຫ້ເປັນກຳມະ-
ສິດແກ່ພວກເຂົາ. 30ແຕ່ຖ້າພວກເຂົາບໍ່ຖືອາວຸດຂ້າມໄປກັບເຈົ້າ, ພວກເຂົາຈະຕ້ອງໄດ້ສ່ວນແຜ່ນດິນການາອານຮ່ວມກັບເຈົ້າເປັນກຳມະສິດ."
31ຄົນກາດກັບຄົນຣູເບັນຕອບວ່າ, "ພຣະຢາເວກ່າວກັບຄົນໃຊ້ຂອງທ່ານຢ່າງໃດ, ພວກເຮົາທັງຫລາຍຈະເຮັດຢ່າງນັ້ນ. 32ພວກເຮົາຈະຖືອາ-
ວຸດຂ້າມໄປຕໍ່ພຣະພັກພຣະຜູ້ເປັນເຈົ້າສູ່ແຜ່ນດິນການາອານ, ແລະທີ່ດິນມໍລະດົກຂອງພວກເຮົານັ້ນຈະຄົງຢູ່ຟາກແມ່ນ້ຳຢໍແດນເບື້ອງນີ້."
33ໂມເຊໄດ້ມອບດິນແດນເຫລົ່ານີ້ແກ່ຄົນກາດ ແລະຄົນຣູເບັນ, ແລະເຄິ່ງຫນຶ່ງຂອງຕະກຸນມານາເຊລູກຊາຍໂຢເຊັບ, ຄືອານາຈັກຂອງສີໂຫນກະ-
ສັດແຫ່ງຄົນອະໂມຣິດ, ແລະອານາຈັກຂອງໂອກກະສັດແຫ່ງບາຊານ, ທັງແຜ່ນດິນ, ແລະຫົວເມືອງ, ຕະຫລອດພົມແດນ,
ຄືຫົວເມືອງໃຫຍ່ໃນແຜ່ນດິນທີ່ອ້ອມຮອບເຂົາ.
34ແລະຄົນກາດກໍສ້າງເມືອງດີໂບນ, ອາຕາໂຣດ, ອາໂຣເອ. 35ອາດໂຣດ ໂຊຟັນ, ຢາເຊ, ໂຢກເບຮາ, 36ເບັດນິມຣາ, ແລະເບັດຮາຣານ,
ໃຫ້ເປັນເມືອງມີກຳແພງອ້ອມຮອບ ແລະສ້າງຄອກໃຫ້ພວກແກະ.
37ຄົນຣູເບັນກໍສ້າງເມືອງເຮັດຊະໂບນ, ເອເລອາເລ, ກີຣິອາດທາຢິມ, 38ເນໂບ, ແລະບາອານເມໂອນ, (ຊື່ເຫລົ່ານີ້ຕ້ອງປ່ຽນໃຫມ່), ແລະສິບມາ,
ແລະຕັ້ງຊື່ໃຫມ່ໃຫ້ແກ່ເມືອງທີ່ພວກເຂົາສ້າງຂຶ້ນນັ້ນ. 39ຄົນມາກີບຸດຊາຍມານາເຊໄດ້ເຂົ້າໄປຍຶດເມືອງກີເລອາດ, ແລະຂັບໄລ່ພວກອະໂມ-
ຣິດຊຶ່ງຢູ່ໃນເມືອງນັ້ນ.


generated on Tue Jun 17 19:01:42 2025

[40]ໂມເຊຈຶ່ງຍົກກິເລອາດໃຫ້ແກ່ມາກີບຸດຊາຍມານາເຊ, ແລະພວກເຂົາກໍເຂົ້າອາໃສຢູ່ໃນເມືອງນັ້ນ.[41]ຢາອີ ບຸດຊາຍມານາເຊຍົກທັບໄປຍຶດຊົນ-
ນະບົດຂອງພວກເຂົາເຫລົ່ານັ້ນ, ແລະເອີ້ນຊື່ວ່າຮາໂວດຢາອີ.[42]ໂນບາໄປຍຶດເກນາດ, ແລະຊົນນະບົດຂອງເມືອງນີ້, ແລະເອີ້ນວ່າເມືອງໂນ-
ບາຕາມຊື່ຂອງພວກເຂົາ.

 generated on Tue Jun 17 19:01:42 2025

33 1ຕໍ່ໄປນີ້ແມ່ນໄລຍະທາງຢ່າງຂອງຄົນອິສຣາເອນ, ເມື່ອເຂົາຢ່າງອອກຈາກແຜ່ນດິນເອຢິບເປັນຫມວດຫມູ່ພາຍໃຕ້ການນຳຂອງໂມ-
ເຊແລະອາໂຣນ. 2ໂມເຊໄດ້ຈົດສະຖານທີ່ທີ່ພວກເຂົາອອກຢ່າງເທື່ອລະໄລຍະ, ຕາມພຣະບັນຊາຂອງພຣະຢາເວ. ຕໍ່ໄປນີ້ເປັນໄລຍະ,
ຕາມສະຖານທີ່ທີ່ພວກເຂົາຢ່າງຜ່ານໄປ.

3ພວກເຂົາຢ່າງອອກຈາກຣາເມເສດໃນເດືອນຕົ້ນ, ໃນວັນທີສິບຫ້າຂອງເດືອນຕົ້ນນັ້ນ, ຖັດຈາກວັນປັດສະຄາໄປມື້ຫນຶ່ງ, ຄົນອິສຣາ-
ເອນຢ່າງອອກຢ່າງມີໄຊໃນສາຍຕາຂອງບັນດາຊາວເອຢິບທັງຫມົດ. 4ຂະນະນັ້ນ, ຊາວເອຢິບກຳລັງຝັງສົບລູກຫົວປີທັງຫລາຍຂອງຕົນ, ຜູ້ທີ່ພຣະ-
ຢາເວຊົງປະຫານຊີວິດທ່າມກາງພວກເຂົາ, ພຣະຜູ້ເປັນເຈົ້າຊົງລົງໂທດພະທັງຫລາຍຂອງເຂົາດ້ວຍ.
5ດັ່ງນັ້ນ ຄົນອິສຣາເອນຈຶ່ງໄດ້ຢ່າງອອກຈາກຣາເມເສດ, ແລະຕັ້ງຄ້າຍທີ່ສຸກໂກດ. 6ແລະພວກເຂົາໄດ້ຢ່າງອອກຈາກສຸກ-
ໂກດ ແລະມາຕັ້ງຄ້າຍທີ່ເອທາມ, ຊຶ່ງຢູ່ແຄມຖິ່ນແຫ້ງແລ້ງກັນດານ. 7ຈພວກເຂົາໄດ້ຢ່າງອອກຈາກເອທາມ, ຖອຍຫລັງກັບມາຢູ່ຕໍ່ຫນ້າບາອານເຊ-
ໂຟນ, ແລະພວກເຂົາໄດ້ຕັ້ງຄ້າຍຢູ່ຫນ້າເມືອງມິກໂດນ.
8ແລະພວກເຂົາໄດ້ຢ່າງອອກຈາກຫນ້າຮາຮີໂຣດຂ້າມກາງທະເລເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ. ແລະພວກເຂົາຢ່າງໄປໃນຖິ່ນແຫ້ງແລ້ງກັນ-
ດານເອທາມໄລຍະທາງສາມມື້ ແລະຕັ້ງຄ້າຍທີ່ມາຣາ. 9ແລະພວກເຂົາໄດ້ຢ່າງອອກຈາກມາລາມາເຖິງເອລີມ, ທີ່ເອລີມມີນໍ້າພຸສິບສອງແຫ່ງ,
ແລະຕົ້ນປາມເຈັດສິບຕົ້ນ. ແລະພວກເຂົາຕັ້ງຄ້າຍບ່ອນນັ້ນ. 10ພວກເຂົາໄດ້ຢ່າງອອກຈາກເອລີມມາຕັ້ງຄ້າຍທີ່ທະເລແດງ.
11ແລະພວກເຂົາໄດ້ຢ່າງອອກຈາກທະເລແດງມາຕັ້ງຄ້າຍຢູ່ໃນຖິ່ນແຫ້ງແລ້ງກັນດານຊີນ. 12ພວກເຂົາໄດ້ຢ່າງອອກຈາກຖິ່ນແຫ້ງແລ້ງກັນດານຊີນ
ມາຕັ້ງຄ້າຍທີ່ໂດບຟະກາ. 13ແລະພວກເຂົາໄດ້ຢ່າງອອກຈາກໂດບຟະກາ ມາຕັ້ງຄ້າຍທີ່ອາລູຊາ. 14ແລະພວກເຂົາໄດ້ຢ່າງອອກຈາກອາລູຊາ
ຕັ້ງຄ້າຍທີ່ເຣຟີດີມ, ບ່ອນນັ້ນບໍ່ມີນໍ້າໃຫ້ປະຊາຊົນດື່ມ.
15ແລະພວກເຂົາໄດ້ຢ່າງອອກຈາກເຣຟີດີມມາຕັ້ງຄ້າຍໃນຖິ່ນແຫ້ງແລ້ງກັນດານຊີນາຍ. 16ແລະພວກເຂົາໄດ້ຢ່າງອອກຈາກຖິ່ນແຫ້ງແລ້ງກັນ-
ດານຊີນາຍມາຕັ້ງຄ້າຍຢູ່ກິບໂຣດ ຮັດຕວາ. 17ພວກເຂົາໄດ້ຢ່າງອອກຈາກກິບໂຣດ ຮັດຕາວາມາຕັ້ງຄ້າຍທີ່ຮາເຊໂຣດ.
18ແລະພວກເຂົາຍົກຢ່າງອອກຈາກຮາເຊໂຣດ ມາຕັ້ງຄ້າຍທີ່ຣິດມາ.
19ພວກເຂົາໄດ້ຢ່າງອອກຈາກຣິດມາ ມາຕັ້ງຄ້າຍທີ່ຣິມໂມນ ເປເຣດ. 20ພວກເຂົາໄດ້ຢ່າງອອກຈາກຣິມໂມນ ເປເຣດ ມາຕັ້ງຄ້າຍທີ່ລິບນາ.
21ພວກເຂົາໄດ້ຢ່າງອອກຈາກລິບນາ ມາຕັ້ງຄ້າຍທີ່ຣິດສາ. 22-ແລະພວກເຂົາໄດ້ຢ່າງອອກຈາກຣິດສາ ມາຕັ້ງຄ້າຍທີ່ເກເຮລາທາ.
23ພວກເຂົາໄດ້ຢ່າງອອກຈາກເກເຮລາທາ ມາຕັ້ງຄ້າຍທີ່ພູເຂົາເຊເຟ. 24ແລະພວກເຂົາໄດ້ຢ່າງອອກຈາກພູເຂົາເຊເຟ ມາຕັ້ງຄ້າຍທີ່ຮາຣາດາ.
25ພວກເຂົາໄດ້ຢ່າງອອກຈາກຮາຣາດາ ມາຕັ້ງຄ້າຍທີ່ມັກເຮໂລດ. 26ແລະພວກເຂົາໄດ້ຢ່າງອອກຈາກມັກເຮໂລດ ມາຕັ້ງຄ້າຍທີ່ຕາຮາດ.
27ພວກເຂົາໄດ້ຢ່າງອອກຈາກຕາຮາດ ມາຕັ້ງຄ້າຍທີ່ເຕຣາ. 28ແລະພວກເຂົາໄດ້ຢ່າງອອກຈາກເຕຣາ ມາຕັ້ງຄ້າຍທີ່ມິທະກາ.
29ພວກເຂົາໄດ້ຢ່າງອອກຈາກມິທະກາ ມາຕັ້ງຄ້າຍທີ່ຮາຊະໂມນາ. 30ແລະພວກເຂົາໄດ້ຢ່າງອອກຈາກຮາຊະໂມນາ ມາຕັ້ງຄ້າຍທີ່ໂມເສໂຣດ.
31ພວກເຂົາໄດ້ຢ່າງອອກຈາກໂມເສໂຣດ ມາຕັ້ງຄ້າຍທີ່ເບເນ ຢາອາການ. 32ແລະພວກເຂົາໄດ້ຢ່າງອອກຈາກເບເນ ຢາອາການ ມາຕັ້ງຄ້າຍທີ່ໂຮເຣ
ຮັກກິດກາດ. 33ພວກເຂົາໄດ້ຢ່າງອອກຈາກໂຮເຣ ຮັກກິດກາດ ມາຕັ້ງຄ້າຍທີ່ໂຢດບາທາ. 34ແລະພວກເຂົາໄດ້ຢ່າງອອກຈາກໂຢດບາທາ
ມາຕັ້ງຄ້າຍທີ່ອາບໂຣນາ.
35- - -ພວກເຂົາໄດ້ຢ່າງອອກຈາກອາບໂຣນາ ມາຕັ້ງຄ້າຍທີ່ເອັດຊີໂອນ ເກເບ. 36ແລະພວກເຂົາໄດ້ຢ່າງອອກຈາກເອັດຊີໂອນ ເກເບ
ມາຕັ້ງຄ້າຍໃນຖິ່ນແຫ້ງແລ້ງກັນດານຊີນ ຄືກາເດັດ. 37ພວກເຂົາໄດ້ຢ່າງອອກຈາກກາເດັດ ມາຕັ້ງຄ້າຍທີ່ພູເຂົາໂຮເຣ ຕິດກັບແຜ່ນດິນເອໂດມ.
38ແລະປະໂລຫິດອາໂຣນໄດ້ຂຶ້ນໄປເທິງພູເຂົາໂຮເຣ, ຕາມພຣະບັນຊາຂອງພຣະຢາເວ ແລະໄດ້ເສຍຊີວິດຢູ່ບ່ອນນັ້ນ ໃນວັນທີຫນຶ່ງ,
ເດືອນທີຫ້າປີທີສີ່ສິບ, ນັບຕັ້ງແຕ່ມື້ທີ່ຄົນອິສຣາເອນຍົກຢ່າງອອກຈາກປະເທດເອຢິບ. 39ເມື່ອອາໂຣນເສຍຊີວິດທີ່ພູເຂົາໂຮເຣນັ້ນ ເພິ່ນມີອາຍຸ123
ປີ.
40ແລະກະສັດເມືອງອາຣັດ, ຊາວການາອານ, ຜູ້ທີ່ຢູ່ໃນຖິ່ນທຸລະກັນດານທາງພາກໃຕ້ໃນແຜ່ນດິນການາອານໄດ້ຍິນຂ່າວວ່າຄົນອິດສະຣາ-
ເອນກຳລັງມາ.
41ແລະພວກເຂົາໄດ້ຢ່າງອອກຈາກພູເຂົາໂຮເຣ ມາຕັ້ງຄ້າຍທີ່ຊັນໂມນາ. 42ພວກເຂົາໄດ້ຢ່າງອອກຈາກຊັນໂມນາ ມາຕັ້ງຄ້າຍທີ່ປູໂນນ.
43ແລະພວກເຂົາໄດ້ຢ່າງອອກຈາກປູໂນນ ມາຕັ້ງຄ້າຍທີ່ໂອໂບດ.
44ພວກເຂົາໄດ້ຢ່າງອອກຈາກໂອໂບດມາຕັ້ງຄ້າຍທີ່ອີເຢ ອາບາຣີມໃນດິນແດນໂມອາບ. 45ແລະພວກເຂົາອອກຢ່າງອອກຈາກອີຢີມມາຕັ້ງຄ້າຍທີ່ດີ-
ໂບນກາດ. 46ພວກເຂົາໄດ້ຢ່າງອອກຈາກດີໂບນກາດ ແລະ ມາຕັ້ງຄ້າຍທີ່ອັນໂມນ ດິບລະທາຢິມ.
47ພວກເຂົາໄດ້ຢ່າງອອກຈາກອັນໂມນ ດິບລະທາຢິມມາຕັ້ງຄ້າຍໃນພູເຂົາເນໂບ. 48ພວກເຂົາໄດ້ຢ່າງອອກຈາກພູເຂົາອາບາຣີມມາຕັ້ງຄ້າຍຢູ່ທົ່ງ-
ພຽງໂມອາບແຄມແມ່ນໍ້າຢໍແດນໃກ້ເມືອງເຢຣີໂກ. 49ພວກເຂົາຕັ້ງຄ້າຍຢູ່ແຄມແມ່ນໍ້າຢໍແດນ, ຕັ້ງແຕ່ເບັດ ເຢຊີໂມດ ໄກໄປຈົນຮອດອາເບັນຊິດ-
ຕິມໃນທົ່ງພຽງໂມອາບ
50ແລະພຣະຢາເວກ່າວກັບໂມເຊໃນທົ່ງພຽງໂມອາບແຄມແມ່ນໍ້າຢໍແດນໃກ້ເມືອງເຢຣີໂກວ່າ, 51" ຈົ່ງກ່າວແກ່ຄົນອິສຣາ-
ເອນວ່າ: ເມື່ອເຈົ້າຂ້າມແມ່ນໍ້າຢໍແດນເຂົ້າໄປໃນແຜ່ນດິນການາອານ, 52ເຈົ້າຈົ່ງຂັບໄລ່ຊາວເມືອງນັ້ນອອກທັງຫມົດໃຫ້ພົ້ນຫນ້າເຈົ້າ. ແລະທຳ-
ລາຍຮູບແກະສະຫລັກຂອງພວກເຂົາໃຫ້ຫມົດແລະທຳລາຍຮູບເຄົາລົບທີ່ເປັນໂລຫະຂອງພວກເຂົາໃຫ້ຫມົດ. ແລະທຳລາຍບັນດາປູຊະນີຍະ-
ສະຖານສູງຂອງພວກເຂົາ.
53ແລະເຈົ້າຈົ່ງຂັບໄລ່ຊາວແຜ່ນດິນນັ້ນອອກ ແລະ ເຂົ້າໄປຕັ້ງຄ້າຍຢູ່ໃນນັ້ນ, ເພາະເຮົາໄດ້ໃຫ້ແຜ່ນດິນນັ້ນໃຫ້ເຈົ້າຖືກຳມະສິດ.
54ພວກເຈົ້າຈົ່ງຈັບສະຫລາກມໍລະດົກທີ່ດິນນັ້ນ, ຕາມຄອບຄົວຂອງເຈົ້າຄອບຄົວທີ່ໃຫຍ່ເຈົ້າຈົ່ງ ໃຫ້ມໍລະດົກສ່ວນໃຫຍ່, ຄອບ-
ຄົວທີ່ນ້ອຍເຈົ້າຈົ່ງໃຫ້ມໍລະດົກສ່ວນນ້ອຍ, ດິນຜືນໃດທີ່ສະຫລາກຕົກແກ່ຄົນໃດກໍເປັນຂອງຄົນນັ້ນ. ເຈົ້າຈົ່ງຮັບມໍລະດົກຕາມຕະກູນຂອງບັນພະ-
ບູລຸດຂອງເຈົ້າ.
55ຖ້າພວກເຈົ້າບໍ່ໄດ້ຂັບໄລ່ຊາວເມືອງນັ້ນອອກໃຫ້ພົ້ນຫນ້າເຈົ້າ, ຕໍ່ມາຜູ້ທີ່ເຈົ້າໃຫ້ເຫລືອຢູ່ນັ້ນກໍຈະກາຍເປັນສັ້ຽນໃນຕາຂອງເຈົ້າ,
ແລະເປັນຫນາມທີ່ສີຂ້າງຂອງເຈົ້າ. ແລະພວກເຂົາຈະຮຸກຮານເຈົ້າໃນແຜ່ນດິນທີ່ເຈົ້າເຂົ້າອາໄສຢູ່ນັ້ນ. 56ແລະ ຕໍ່ມາເຮົາຈະເຮັດແກ່ພວກເຈົ້າ,
ດັ່ງທີ່ເຮົາຄິດຈະປະຕິບັດແກ່ພວກເຂົານັ້ນ."

 generated on Tue Jun 17 19:01:42 2025

34 [1]ພຣະຢາເວໄດ້ສັ່ງໂມເຊວ່າ,[2]“ຈົ່ງບອກຄົນອິດສະຣາເອນວ່າ, ເມື່ອເຈົ້າເຂົ້າໄປໃນແຜ່ນດິນການາອານ (ອັນເປັນແຜ່ນ-
ດິນທີ່ເຮົາໃຫ້ແກ່ເຈົ້າເປັນມໍລະດົກຄືແຜ່ນດິນການາອານຕາມເຂດແດນທັງຫມົດ) ນັ້ນ.[3]ເຂດເບື້ອງໃຕ້ຂອງເຈົ້ານັບຈາກຖິ່ນແຫ້ງແລ້ງກັນ-
ດານຊີນຕາມເບື້ອງເອໂດມ. ແລະ ອານາເຂດໃຕ້ຂອງເຈົ້ານັ້ນນັບຈາກປາຍທະເລຕາຍທາງທິດຕາເວັນອອກ.

[4]ແລະອານາເຂດຂອງເຈົ້າຈະລ້ຽວໄປທາງໃຕ້ເນີນສູງອັກຣັບບິມຂ້າມໄປຫາຖິ່ນແຫ້ງແລ້ງກັນດານຊີນໄປສຸດລົງທີ່ທິດໃຕ້ກາເດັດ ບາເນ-
ອາໄປຈົນຮອດຮາຊາອັດດາຜ່ານໄປຈົນຮອດອາຊະໂມນ.[5]ຈາກບ່ອນນັ້ນ, ອານາເຂດຈະລ້ຽວຈາກອາຊະໂມນຫາແມ່ນໍ້າເອ-
ຢິບໄປສີ້ນສຸດລົງທີ່ທະເລ.
[6]ອານາເຂດທາງທິດຕາເວັນຕົກເຈົ້າຈະໄດ້ທະເລເມດີຕາລາເນ ແລະ ຝັ່ງທະເລນັ້ນ. ນີ້ຈະເປັນເຂດແດນທາງທິດຕາເວັນຕົກຂອງເຈົ້າ.
[7]ຕໍ່ໄປນີ້ເປັນອານາເຂດທາງທິດເຫນືອຂອງເຈົ້າ ຄືຈາກທະເລເມດີຕາລາເນເຈົ້າຈົ່ງເຮັດເຄື່ອງຫມາຍໄປຈົນຮອດພູເຂົາໂຮເຣ,[8]ຈາກພູເຂົາໂຮ-
ເຣເຈົ້າຈົ່ງເຮັດເຄື່ອງຫມາຍເລື້ອຍໄປຈົນຮອດທາງເຂົ້າເມືອງເລໂບຮາມັດ, ແລະ ປາຍສຸດຂອງອານາເຂດເບື້ອງນີ້ຄືເຊດາດ.[9]ແລ້ວອານາ-
ເຂດຈະຍາວໄປຮອດຊີໂຟຣນ ແລະ ໄປສີ້ນສຸດທີ່ຮາຊາເອນັນ. ນີ້ເປັນອານາເຂດທາງທິດເຫນືອຂອງເຈົ້າ.
[10]ແລ້ວຈາກນັ້ນເຈົ້າຈົ່ງເຮັດເຄື່ອງຫມາຍອານາເຂດທາງທິດຕາເວັນອອກຂອງເຈົ້າຈາກຮາຊາ-ເອນັນຫາເຊຟາມ.[11]ແລະອານາ-
ເຂດຈະລົງມາຈາກເຊຟາມຮອດຣິບລາ, ຂ້າງຕາເວັນອອກຂອງເມືອງອາຍິນ. ແລະອານາເຂດຈະລົງມາເຖິງທີ່ສຸດປາຍທະເລຄິນເນເຣດ ທາງທິດ-
ຕາເວັນອອກ.[12]ແລະອານາເຂດຈະລົງມາຮອດແມ່ນໍ້າຢໍແດນສຸດລົງທີ່ທະເລຕາຍ. ນີ້ເປັນແຜ່ນດິນຂອງເຈົ້າ, ຕາມອານາເຂດໂດຍຮອບ.”
[13]ໂມເຊບອກຄົນອິດສະຣາເອນໂດຍກ່າວວ່າ, “ນີ້ເປັນແຜ່ນດິນທີ່ພວກເຈົ້າຈະໄດ້ຈັບສະຫລາກຮັບເປັນມໍລະດົກ, ຊຶ່ງພຣະຢາເວຊົງສັ່ງວ່າ,
ໃຫ້ຍົກໃຫ້ທັງເກົ້າຕະກຸນກັບອີກເຄິ່ງຕະກຸນ.[14]ພາະວ່າຕະກຸນຄົນຣູເບັນຕາມບັນພະບູລຸດຂອງພວກເຂົາ, ແລະ ຕະກຸນຄົນກາດຕາມບັນພະບູ-
ລຸດຂອງພວກເຂົາແມ່ນໄດ້ຮັບມໍລະດົກຂອງພວກເຂົາ, ແລ້ວ ຄົນເຄິ່ງຕະກຸນມານາເຊກໍໄດ້ຮັບມໍລະດົກຂອງພວກເຂົາແລ້ວ.[15]ທັງສອງຕະກຸນ
ແລະ ເຄິ່ງຕະກຸນນັ້ນໄດ້ຮັບມໍລະດົກຂອງພວກເຂົາທີ່ຟາກແມ່ນໍ້າຢໍແດນເບື້ອງນີ້ໃກ້ກັບເມືອງເຢຣີໂກທາງທິດຕາເວັນອອກ.”
[16]ພຣະຢາເວກ່າວກັບໂມເຊວ່າ,[17]” ຕໍ່ໄປນີ້ເປັນຊື່ບຸກຄົນທີ່ຈະແບ່ງດິນແດນແກ່ພວກເຈົ້າ ຄື: ເອເລອາຊາປະໂລຫິດ ແລະ ໂຢຊວຍລູກຊາຍນູນ.
[18]ເຈົ້າຈົ່ງນໍາຜູ້ນໍາຂອງຄົນທຸກຕະກຸນໄປ ແບ່ງດິນແດນເພື່ອເປັນມໍລະດົກ.”
[19]ຕໍ່ໄປນີ້ເປັນຊື່ຂອງພວກຜູ້ນໍາເຫລົ່ານັ້ນຄື: ກາເລັບລູກຊາຍເຢຟຸນເນ, ຈາກຕະກຸນຢູດາ[20]ເຊມູເອນລູກຊາຍອໍາມີຮຸດ ຈາກຄົນຕະກຸນຊີເມໂອນ.
[21]ເອລີດາດລູກຊາຍກີຊະໂລນ, ຈາກຕະກຸນເບັນຢາມິນ.[22]ບຸກກີລູກຊາຍໂຢກລີ, ຜູ້ນໍາຄົນຫນຶ່ງຈາກຕະກຸນດານ.[23]ຮານນີເອນລູກຊາຍເອໂຟດ,
ຜູ້ນໍາຄົນຫນຶ່ງຈາກລູກຫລານຂອງ ໂຢເຊັບຕະກຸນມານາເຊ.
[24]ເກມູເອນລູກຊາຍຊິບຕານ, ຜູ້ນໍາຄົນຫນຶ່ງຈາກຕະກຸນຄົນເອຟຣາຢິມ.[25]ເອລີຊາຟັນລູກຊາຍປານັກ, ຜູ້ນໍາຄົນຫນຶ່ງຈາກຕະກຸນຄົນເຊບູລູນ[26]ປັນ-
ຕີເອນລູກຊາຍອັດຊານ, ຜູ້ນໍາຄົນຫນຶ່ງຈາກຕະກຸນຄົນອິດຊາຄາ.
[27]ອາຮີຮູດລູກຊາຍເຊໂລມີ, ຜູ້ນໍາຄົນຫນຶ່ງຈາກຕະກຸນຄົນອາເຊ.[28]ເປດາເອນລູກຊາຍອໍາມີຮຸດ, ຫົວຫນ້າຄົນຫນຶ່ງຈາກຕະກຸນຄົນນັບທາລີ”[29]ບຸກ-
ຄົນເຫລົ່ານີ້ເປັນຄົນທີ່ພຣະຢາເວຊົງບອກໃຫ້ແບ່ງມໍລະດົກໃຫ້ຄົນອິສຣາເອນໃນ ແຜ່ນດິນການາອານ.

 generated on Tue Jun 17 19:01:42 2025

35 [1]ພຣະຢາເວຊົງກ່າວກັບໂມເຊໃນທົ່ງພຽງໂມອາບແຄມແມ່ນໍ້າຢໍແດນໃກ້ກັບເມືອງເຢຣີໂກ ວ່າ,[2]“ຈົ່ງບອກຄົນອິສຣາ-
ເອນໃຫ້ພວກເຂົາຍົກເມືອງໃຫ້ຄົນເລວີໄດ້ອາໄສຢູ່. ຈາກມໍລະດົກທີ່ພວກເຂົາໄດ້ຮັບນັ້ນ ແລະ ຍົກທົ່ງຫຍ້າອ້ອມຮອບເມືອງນັ້ນໃຫ້ຄົນເລ-
ວີດ້ວຍ.

[3]ໃຫ້ເມືອງນັ້ນເປັນຂອງພວກເຂົາເພື່ອຈະໄດ້ອາໄສ. ໃຫ້ທົ່ງຫຍ້າເພື່ອຝູງສັດ, ແລະຊັບສິ່ງຂອງຕ່າງໆ ແລະ ສັດທັງຫລາຍຂອງພວກເຂົາ.
[4]ເຊິ່ງທົ່ງຫຍ້າຂອງເມືອງທີ່ເຈົ້າຍົກໃຫ້ແກ່ຄົນເລວີນັ້ນໃຫ້ມີເຂດຈາກກຳແພງເມືອງແລະຫ່າງອອກໄປຫນຶ່ງພັນສອກໂດຍຮອບ.
[5]ແລະເຈົ້າຈົ່ງວັດແທກພາຍນອກເມືອງສອງພັນສອກເປັນດ້ານຕາເວັນອອກ, ສອງພັນສອກເປັນທິດໃຕ້, ສອງພັນສອກເປັນທິດຕາເວັນຕົກ,
ສອງພັນສອກເປັນທິດເຫນືອ, ໃຫ້ຕົວເມືອງຢູ່ເຄິ່ງກາງ. ນີ້ເປັນທົ່ງຫຍ້າປະຈຳເມືອງເຫລົ່ານັ້ນ.
[6]ເມືອງຊຶ່ງເຈົ້າຈະຍົກໃຫ້ແກ່ຄົນເລວີ ຄື ເມືອງລີ້ໄພຫົກເມືອງ ເຈົ້າຈະອະນຸຍາດໃຫ້ຄົນຂ້າຄົນຫນີໄປຢູ່ທີ່ນັ້ນ. ແລະ
ເຈົ້າຈົ່ງເພີ່ມໃຫ້ພວກເຂົາອີກສີ່ສິບສອງເມືອງ.[7]ເມືອງທັງຫມົດທີ່ເຈົ້າຍົກໃຫ້ຄົນເລວີເປັນສີ່ສິບແປດຫົວເມືອງ.
ຈົ່ງໃຫ້ມີທົ່ງຫຍ້າຕາມເມືອງຕ່າງໆດ້ວຍ.
[8]ແລະຫົວເມືອງທີ່ເຈົ້າຈະໃຫ້ພວກເຂົາຈາກກຳມະສິດຂອງຄົນອິສະຣາເອນນັ້ນ, ຈາກຕະກຸນໃຫຍ່ເຈົ້າກໍເອົາເມືອງຫລາຍ, ຈາກຕະ-
ກຸນນ້ອຍເຈົ້າກໍເອົາເມືອງນ້ອຍ. ທຸກຕະກຸນຕາມສ່ວນຂອງມໍລະດົກທີ່ຕົນໄດ້ຮັບ ໃຫ້ຍົກໃຫ້ແກ່ຄົນເລວີ.”
[9]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ,[10]ພຣະຢາເວກ່າວກັບໂມເຊວ່າ, ເມື່ອພວກເຈົ້າຂ້າມແມ່ນໍ້າຢໍແດນ, ເຂົ້າໄປໃນແຜ່ນດິນການາອານ,[11]ໃຫ້ພວກ
ເຈົ້າເລືອກເອົາເມືອງລີ້ໄພເພື່ອຜູ້ທີ່ຂ້າຄົນໂດຍບໍ່ເຈດຕະນາ ຈະຫລົບລີ້ຢູ່ໄດ້.
[12]ໃຫ້ເມືອງເຫລົ່ານັ້ນເປັນເມືອງລີ້ໄພຈາກຜູ້ທີ່ອາຄາດ, ເພື່ອບໍ່ໃຫ້ຜູ້ທີ່ຂ້າຄົນຕ້ອງຕາຍກ່ອນທີ່ເຂົາຈະຢືນຕໍ່ຫນ້າຊຸມນຸມຊົນເພື່ອຮັບການພິພາກ-
ສາ.[13]ເຈົ້າຕ້ອງໃຫ້ເປັນເມືອງລີ້ໄພຫົກເມືອງ.
[14]ຈົ່ງໃຫ້ຟາກແມ່ນໍ້າຢໍແດນເບື້ອງນີ້ສາມເມືອງ, ແລະ ອີກສາມເມືອງໃນແຜ່ນດິນການາອານ ເປັນເມືອງລີ້ໄພ.
[15]ທັງຫົກເມືອງນີ້ເປັນເມືອງລີ້ໄພຂອງຄົນອິສຣາເອນ, ສຳລັບຄົນຕ່າງດ້າວ, ແລະ ສຳລັບຄົນທີ່ອາໄສຢູ່ທ່າມກາງພວກເຂົາ,
ເພື່ອຄົນຫນຶ່ງຄົນໃດທີ່ໄດ້ຂ້າຜູ້ອື່ນໂດຍບໍ່ໄດ້ເຈດຕະນາໄດ້ຫລົບຫນີໄປບ່ອນນັ້ນ.
[16]ຖ້າຜູ້ໃດຕີຄົນອື່ນດ້ວຍເຄື່ອງມືເຫລັກ, ຈົນຄົນນັ້ນຕາຍ, ລາວກໍເປັນຂ້າຕະກອນ, ໃຫ້ປະຫານຊີວິດຄົນນັ້ນ.
[17]ຜູ້ໃດຕີລາວໃຫ້ລົ້ມລົງດ້ວຍກ້ອນຫີນໃນມືທີ່ມີຂະຫນາດຂ້າຄົນໄດ້, ແລະ ລາວຕາຍ, ຜູ້ນັ້ນເປັນຂ້າຕະກອນ, ໃຫ້ປະຫານຊີວິດຄົນນັ້ນ.
[18]ຫລືຜູ້ໃດໃຊ້ອາວຸດໄມ້ທີ່ຢູ່ໃນມືທີ່ຂະຫນາດຂ້າຄົນໄດ້, ຕີລາວລົ້ມລົງ, ແລະ ຕາຍ, ຜູ້ນັ້ນເປັນຂ້າຕະກອນ, ໃຫ້ປະຫານຊີວິດຄົນນັ້ນເສຍ.
[19]ໃຫ້ຜູ້ທີ່ຄຽດແຄ້ນເອງເປັນຜູ້ປະຫານຊີວິດຄົນນັ້ນ. ຖ້າວ່າຜູ້ທີ່ຄຽດແຄ້ນພົບລາວເມື່ອໃດ, ກໍໃຫ້ປະຫານຊີວິດເມື່ອນັ້ນ.
[20]ຖ້າຜູ້ໃດແທງລາວດ້ວຍຄວາມກຽດຊັງ, ຫລືລໍຖ້າແກວ່ງກ້ອນຫີນໃສ່ລາວ, ຈົນຕາຍ.[21]ຫລືເພາະເປັນສັດຕູກັນຕີລາວລົ້ມລົງ, ຈົນລາວຕາຍ
ໃຫ້ປະຫານຊີວິດຜູ້ທີ່ເຮັດໃຫ້ລາວຕາຍນັ້ນ, ລາວເປັນຂ້າຕະກອນ, ເມື່ອຜູ້ທີ່ຄຽດແຄ້ນພົບລາວເມື່ອໃດ, ກໍໃຫ້ປະຫານຊີວິດລາວເສຍ.
[22]ແຕ່ຖ້າຜູ້ໃດບໍ່ໄດ້ເປັນສັດຕູກັນແທງລາວ, ຫລືເອົາຫຍັງດຶກໃສ່ລາວໂດຍບໍ່ໄດ້ຄອຍຖ້າດັກຕີຢູ່.[23]ຫລືໃຊ້ກ້ອນຫີນທີ່ມີຂະ-
ຫນາດຂ້າຄົນໄດ້ດຶກຖືກລາວໂດຍບໍ່ໄດ້ເຫັນ, ແລະ ລາວຕາຍ, ທັງທີ່ລາວບໍ່ໄດ້ເປັນສັດຕູກັນ ແລະ ບໍ່ໄດ້ປອງຮ້າຍກັນ.
[24]ໃນກໍລະນີນີ້, ກໍໃຫ້ຊຸມນຸມຊົນຕັດສິນຄວາມລະຫວ່າງຜູ້ຂ້າ ແລະ ຜູ້ຄຽດແຄ້ນຕາມກົດຫມາຍນີ້.[25]ໃຫ້ຊຸມນຸມ-
ຊົນຊ່ວຍຜູ້ຂ້າໃຫ້ພົ້ນຈາກມືຜູ້ຂອງຄຽດແຄ້ນ, ໃຫ້ຊຸມນຸມຊົນພາໂຕລາວກັບໄປເມືອງລີ້ໄພ, ຊຶ່ງລາວໄດ້ຫນີໄປຢູ່ນັ້ນ,
ໃຫ້ລາວຢູ່ບ່ອນນັ້ນຈົນກວ່າມະຫາປະໂຣຫິດ, ຜູ້ໄດ້ຖືກເຈີມໄວ້ດ້ວຍນໍ້າມັນບໍລິສຸດຈະຕາຍເສຍກ່ອນ.
[26]ຖ້າຜູ້ຂ້າຄົນໂດຍບໍ່ຕັ້ງໃຈນັ້ນ ອອກໄປຈາກເຂດເມືອງລີ້ໄພເວລາໃດ,[27]ແລະຜູ້ຄຽດແຄ້ນພົບລາວນອກເຂດເມືອງລີ້ໄພ,
ຜູ້ຄຽດແຄ້ນໄດ້ຂ້າຜູ້ຂ້າຄົນນັ້ນ, ຜູ້ທີ່ຄຽດແຄ້ນຈະບໍ່ມີຄວາມຜິດໃດ.[28]ເພາະວ່າຊາຍຜູ້ນັ້ນຕ້ອງຢູ່ໃນເຂດເມືອງລີ້ໄພ, ຈົນມະຫາປະ-
ໂລຣຫິດຕາຍກ່ອນ. ຫລັງຈາກທີ່ມະຫາປະໂຣຫິດຕາຍແລ້ວ, ຜູ້ຂ້າຄົນນັ້ນຈຶ່ງສາມາດກັບໄປແຜ່ນດິນທີ່ເຂົາຖືກຳມະສິດຢູ່ໄດ້.
[29]ເຫລົ່ານີ້ຄວນເປັນກົດຫມາຍແຫ່ງຄຳຕັດສິນຂອງພວກເຈົ້າຕະຫລອດຊົ່ວອາຍຸຂອງພວກເຈົ້າໃນທີ່ອາໄສທັງປວງຂອງພວກເຈົ້າ.
[30]ຫາກຜູ້ໃດຂ້າລາວຕາຍ, ໃຫ້ປະຫານຊີວິດຜູ້ນັ້ນຕາມປາກຂອງພະຍານ, ແຕ່ຢ່າປະຫານຊີວິດຜູ້ໃດດ້ວຍມີພະຍານປາກດຽວ.
[31]ຍິ່ງກວ່ານັ້ນອີກ, ເຈົ້າຢ່າຮັບຄ່າໄຖ່ຊີວິດຂອງຜູ້ຂ້າຄົນ ຜູ້ມີຄວາມຜິດເຖິງຕາຍນັ້ນ, ແຕ່ລາວຕ້ອງຕາຍ.[32]ເຈົ້າບໍ່ຕ້ອງຮັບຄ່າໄຖ່ຄົນທີ່ຫລົບ-
ຫນີໄປຍັງເມືອງລີ້ໄພ. ເພື່ອໃຫ້ກັບມາຢູ່ໃນແຜ່ນດິນຂອງລາວ ກ່ອນທີ່ມະຫາປະໂຣຫິດຈະຕາຍ.
[33]ດ້ວຍວິທີນີ້ ເຈົ້າຈຶ່ງບໍ່ເຮັດໃຫ້ແຜ່ນດິນທີ່ພວກເຈົ້າອາໄສຢູ່ເປັນມົນທິນ ເພາະວ່າເລືອດເຮັດໃຫ້ແຜ່ນດິນເປັນມົນທິນ, ແລະບໍ່ມີສິ່ງໃດທີ່ຈະຊຳ-
ລະແຜ່ນດິນໃຫ້ຫມົດມົນທິນທີ່ເກີດຂຶ້ນຈາກເລືອດໃນແຜ່ນດິນນັ້ນໄດ້, ນອກຈາກຈະປະຫານຜູ້ທີ່ເຮັດໃຫ້ເລືອດຕົກເສຍກ່ອນ.
[34]ເຈົ້າຢ່າເຮັດໃຫ້ເກີດມົນທິນໃນແຜ່ນດິນທີ່ເຈົ້າອາໄສຢູ່, ມັນເປັນທີ່ເຮົາຢູ່ນັ້ນ, ເຮົາ, ຄືພຣະຢາເວ, ທີ່ຢູ່ທ່າມກາງຄົນອິສຣາເອນ.”

 generated on Tue Jun 17 19:01:42 2025

36 1ແລ້ວຜູ້ນຳຄອບຄົວຄົນກີເລອາດ ລູກຊາຍຂອງມາກີ ຜູ້ເປັນລູກຊາຍມານາເຊ ຄອບຄົວຕ່າງຂອງລູກຊາຍໂຢເຊັບ, ເຂົ້າມາໃກ້ ແລະເວົ້າຕໍ່-
ຫນ້າໂມເຊ ແລະຕໍ່ຫນ້າຜູ້ນຳ ຄືບັນດາຜູ້ນຳຄອບຄົວຄົນອິສຣາເອນ. 2ພວກເຂົາເວົ້າວ່າ “ພຣະຢາເວໄດ້ບອກເຈົ້ານາຍຂອງຂ້າ-
ນ້ອຍໃຫ້ຈັບສະຫລາກຍົກແຜ່ນດິນ ໃຫ້ເປັນມໍລະດົກແກ່ຄົນອິສະຣາເອນ. ເຈົ້ານາຍຂອງຂ້ານ້ອຍໄດ້ຮັບບັນຊາຈາກພຣະຢາເວໃຫ້ຍົກມໍລະ-
ດົກຂອງເຊໂລເຟຂາດພີ່ນ້ອງຂອງພວກເຮົາແກ່ລູກສາວຂອງລາວ.

3ຖ້ານາງທັງຫລາຍແຕ່ງງານກັບລູກຊາຍທັງຫລາຍຂອງຄົນອິສຣາເອນຕະກຸນອື່ນແລ້ວ. ສ່ວນມໍລະດົກຂອງບັນພະບູ-
ລຸດຂອງພວກເຮົາຈະເພີ່ມໃຫ້ກັບມໍລະດົກຂອງຄົນຕະກູນທີ່ນາງໄປຢູ່ນຳ. ເພາະສະນັ້ນຈຶ່ງເປັນການນຳມໍລະ-
ດົກໄປຈາກສ່ວນທີ່ເປັນຂອງພວກເຮົາ. 4ແລະເມື່ອເຖິງປີແຫ່ງສຽງເຂົາສັດຂອງຄົນອິສຣາເອນມາເຖິງ, ມໍລະ-
ດົກທີ່ເປັນສ່ວນຂອງນາງກໍຈະຖືກຍົກໄປເພີ່ມເຂົ້າກັບສ່ວນຂອງຕະກຸນທີ່ນາງໄປຢູ່ນຳ. ຈຶ່ງເປັນການນຳເອົາສ່ວນມໍລະດົກຂອງນາງໄປຈາກສ່ວນມໍ-
ລະດົກຂອງຕະກຸນພໍ່ຂອງພວກເຮົາ.”
5ດັ່ງນັ້ນ ໂມເຊ ຈຶ່ງບອກປະຊາຊົນໃຫ້ເຮັດຕາມຄຳສັ່ງຂອງອົງພຣະຢາເວ ດັ່ງນີ້: “ເລື່ອງທີ່ເຜົ່າມານາເຊ
ເວົ້າມານັ້ນແມ່ນຖືກຕ້ອງ 6ສະນັ້ນແຫລະພຣະຢາເວຈຶ່ງໄດ້ກ່າວວ່າ, ‘ພວກລູກສາວຂອງເສໂລເຟຮັດມີສິດທີ່ຈະແຕ່ງງານກັບໃຜກໍໄດ້ແຕ່
ຕ້ອງແມ່ນຄົນໃນເຜົ່າດຽວກັນ.’
7ສ່ວນມໍລະດົກຂອງຄົນອິດສະຣາເອນຈະບໍ່ຖືກຍົກຍ້າຍຈາກຕະກຸນຫນຶ່ງໄປໃຫ້ອີກຕະກຸນຫນຶ່ງ, ຄົນອິດສະຣາເອນທຸກຄົນຕ້ອງຢູ່ໃນມໍລະ-
ດົກຂອງຕະກຸນບັນພະບູລຸດຂອງຕົນ.
8ຍິງທຸກຄົນຜູ້ທີ່ຮັບກຳມະສິດມໍລະດົກໃນຕະກຸນອິດສະຣາເອນຕະກຸນໃດກໍໃຫ້ເປັນເມຍຂອງຄົນໃດຄົນຫນຶ່ງໃນຄອບຄົວໃນຕະກຸນພໍ່ຂອງຕົນ.
ເພື່ອຄົນອິດສະຣາເອນທຸກຄົນຈະໄດ້ຖືກຳມະສິດມໍລະດົກຂອງພໍ່ຂອງພວກເຂົາ. 9ຈະບໍ່ມີມໍລະດົກທີ່ຖືກຍ້າຍຈາກຕະກຸນຫນຶ່ງໄປອີກຕະກຸນຫນຶ່ງ,
ທຸກໆເຜົ່າຂອງຄົນອິສຣາເອນແຕ່ລະຕະກຸນຄວນຮັກສາໄວ້ມໍລະດົກຂອງຕົນ’”
10ພຣະຢາເວຊົງບອກໂມເຊຢ່າງໃດ, ລູກສາວທັງຫລາຍຂອງເຊໂລເຟຮັດກໍປະຕິບັດຢ່າງນັ້ນ. 11ມາລາ, ຕີຣະຊາ, ໂຮກລາ, ມີລະກາ, ແລະໂນອາ,
ລູກສາວຂອງເຊໂລເຟຮັດໄດ້ແຕ່ງງານກັບລູກຊາຍທັງຫລາຍຂອງພີ່ນ້ອງພໍ່ຂອງຕົນ. 12ພວກນາງໄດ້ແຕ່ງງານກັບຄອບຄົວມານາ-
ເຊລູກຊາຍຂອງໂຢເຊັບ. ໃນທາງນີ້, ມໍລະດົກຂອງນາງກໍຍັງຢູ່ໃນຕະກຸນພໍ່ຂອງນາງ.
13ຂໍ້ຄວາມເຫລົ່ານີ້ເປັນບົດບັນຍັດ ແລະ ຄຳຕັດສິນຊຶ່ງພຣະຢາເວໄດ້ຊົງສັ່ງຜ່ານທາງ ໂມເຊແກ່ຄົນອິດສະຣາເອນໃນທົ່ງພຽງໂມອາບແຄມແມ່-
ນ້ຳຢໍແດນໃກ້ກັບເມືອງເຢຣິໂກ.

# ພຣະບັນຍັດສອງ

## 1

1ເຫລົ່ານີ້ຄືບັນດາຖ້ອຍຄຳຂອງໂມເຊທີ່ກ່າວຕໍ່ຊາວອິດສະຣາເອນທັງຫມົດ ທີ່ອີກຟາກຫນຶ່ງຂອງແມ່ນ້ຳຈໍແດນໃນຖິ່ນທຸລະກັນດານ,
ໃນທົ່ງພຽງຂອງພູເຂົາແມ່ນ້ຳຈໍແດນເຊິ່ງຢູ່ກົງກັນຂ້າມກັບເມືອງ ຊູຟະ, ລະຫວ່າງເມືອງປາຣານ, ໂຕເຟນ, ລາບານ, ຮາເຊໂຣດ, ແລະ
ດີຊາຮາບ. 2ຈາກໂຮເຣບໄປທາງພູເຂົາຊີນາຍເພື່ອຈະໄປເຖິງເມືອງຄາເດັດບາເນຍ, ຕ້ອງໃຊ້ເວລາເດີນທາງສິບເອັດມື້

3ເຫດການນີ້ເກີດຂຶ້ນໃນປີທີສີ່ສິບ, ໃນເດືອນທີສິບເອັດ, ໃນມື້ທຳອິດຂອງເດືອນ,
ທີ່ໂມເຊໄດ້ເວົ້າຕໍ່ປະຊາຊົນອິດສະຣາເອນເຖິງທຸກສິ່ງທີ່ພຣະຢາເວໄດ້ຊົງບັນຊາໂມເຊກ່ຽວກັບພວກເຂົາ.
4ນີ້ແມ່ນຫລັງຈາກທີ່ພຣະຢາເວໄດ້ໂຈມຕີສີໂຫນກະສັດຂອງຄົນອາໂມຣິດ, ຊຶ່ງອາໄສຢູ່ໃນເຮັດຊະໂບນ, ແລະ ໂອກກະສັດແຫ່ງບາຊານ,
ຊຶ່ງອາໄສຢູ່ໃນອັດຊະຕາໂຣດ ແລະເອັດເຣອີ.
5ທາງອີກຟາກຫນຶ່ງຂອງແມ່ນ້ຳຈໍແດນ, ໃນດິນແດນໂມອາບ, ໂມເຊເລີ່ມຕົ້ນປະກາດຄຳສັ່ງສອນເຫລົ່ານີ້ວ່າ,
6"ພຣະຢາເວພຣະເຈົ້າຂອງພວກເຮົາໄດ້ກ່າວກັບພວກເຮົາທີ່ໂຮເຣັບ, ວ່າ, 'ພວກເຈົ້າໄດ້ອາໄສຢູ່ໃນປະເທດຮ່ອມພູເຂົານີ້ດົນນານພໍແລ້ວ.
7ກັບໄປ ແລະ ເລີ່ມການເດີນທາງຂອງເຈົ້າ, ແລະໄປເຖິງປະເທດຮ່ອມພູແຫ່ງອາໂມຣິດ
ແລະໄປເຖິງສະຖານທີ່ໃກ້ຄຽງໃນເຂດທົ່ງພຽງຂອງຮ່ອມພູແຫ່ງແມ່ນ້ຳຈໍແດນ, ໃນປະເທດຮ່ອມພູເຂົາ, ໃນທີ່ພູພຽງຕໍ່າ, ໃນເນເກບ, ແລະ
ຕາມຊາຍຝັ່ງທະເລ - ໃນດິນແດນການາອານ, ແລະ ໃນເລບານອນຈົນເຖິງແມ່ນ້ຳໃຫຍ່ເອີຟຣັດ, 8ເບິ່ງສາ,
ເຮົາໄດ້ຕັ້ງດິນແດນນັ້ນເອົາໄວ້ຕໍ່ຫນ້າພວກເຈົ້າ; ຈົ່ງເຂົ້າໄປ ແລະ ຍຶດຄອງດິນແດນນັ້ນເອົາໄວ້ຕໍ່ຫນ້າພວກເຈົ້າ;
ຈົ່ງເຂົ້າໄປຍຶດຄອງດິນແດນນັ້ນທີ່ພຣະຢາເວໄດ້ຊົງສັນຍາໄວ້ແກ່ບັນດາບັນພະບູລຸດຂອງພວກເຈົ້າ ຄື ອັບຣາຮາມ, ອີຊາກ, ແລະ ຢາໂຄບ -
ເພື່ອເອົາໃຫ້ແກ່ພວກເຂົາ ແລະ ເຊື້ອສາຍຂອງພວກເຂົາທີ່ພາຍຫລັງຈາກພວກເຂົານັ້ນ.'
9ຂ້ານ້ອຍໄດ້ເວົ້າກັບທ່ານໃນເວລານັ້ນວ່າ, 'ຂ້ານ້ອຍບໍ່ສາມາດແບກພວກທ່ານໄວ້ພຽງຄົນດຽວໄດ້. 10ພຣະຢາເວ
ພຣະເຈົ້າຂອງພວກທ່ານໄດ້ຊົງເພີ່ມທະວີຄູນພວກທ່ານ, ແລະ ເບິ່ງສາ, ໃນວັນນີ້ພວກທ່ານມີຈຳນວນຫລາຍດັ່ງດວງດາວໃນຟ້າສະຫວັນ.
11ຂໍພຣະຢາເວ, ພຣະເຈົ້າຂອງບັນພະບູລຸດຂອງພວກທ່ານ, ຊົງເຮັດໃຫ້ພວກທ່ານເພີ່ມພູນຫລາຍຂຶ້ນອີກເປັນພັນເທົ່າ, ແລະ
ຂໍຊົງອວຍພອນພວກທ່ານຕາມທີ່ຊົງສັນຍາເອົາໄວ້ກັບພວກທ່ານ!
12ເຮົາຈະສາມາດແບກຫາບພາລະຫນັກ, ແລະ ຂໍ້ພິພາກຕ່າງໆ ຂອງພວກທ່ານໄດ້ແນວໃດ? 13ຈົ່ງເລືອກບັນດາຄົນທີ່ສະຫລາດ,
ຄົນທີ່ມີຄວາມເຂົ້າໃຈ, ແລະ ຄົນທີ່ມີຊື່ສຽງດີຈາກແຕ່ລະເຜົ່າ, ແລະ
ຂ້ານ້ອຍຈະເຮັດໃຫ້ພວກເຂົາເປັນຫົວຫນ້າປົກຄອງເຫນືອພວກທ່ານ.' 14ພວກທ່ານໄດ້ຕອບຂ້ານ້ອຍວ່າ,
'ສິ່ງທີ່ທ່ານໄດ້ກ່າວນັ້ນເປັນສິ່ງທີ່ດີທີ່ພວກເຮົາສົມຄວນເຮັດ.'

[15]ດັ່ງນັ້ນຂ້ານ້ອຍຈຶ່ງໄດ້ເລືອກບັນດາຫົວໜ້າອອກມາຈາກເຜົ່າຕ່າງໆຂອງພວກທ່ານ, ຄືຄົນທີ່ສະຫລາດ, ແລະ ຄົນທີ່ມີຊື່ສຽງດີ, ແລະ
ແຕ່ງຕັ້ງພວກເຂົາໃຫ້ເປັນຫົວໜ້າປົກຄອງດູແລພວກທ່ານ, ເປັນຫົວໜ້າຄວບຄຸມຄົນໜຶ່ງພັນຄົນ, ເປັນຫົວໜ້າຄວບຄຸມຄົນໜຶ່ງຮ້ອຍຄົນ,
ເປັນຫົວໜ້າຄວບຄຸມຄົນຫ້າໝື່ນຄົນ, ເປັນຫົວໜ້າຄວບຄຸມຄົນສິບຄົນ, ແລະ ແຕ່ງຕັ້ງບັນດາເຈົ້າໜ້າທີ່ປະຈໍາເຜົ່າແຕ່ລະເຜົ່າ.
[16]ຂ້ານ້ອຍໄດ້ສັ່ງບັນດາຜູ້ພິພາກສາຂອງພວກທ່ານໃນຄັ້ງນັ້ນວ່າ 'ຈົ່ງຟັງຂໍ້ພິພາກສາຕ່າງໆລະຫວ່າງພີ່ນ້ອງຂອງພວກທ່ານ, ແລະ
ຈົ່ງຕັດສິນຢ່າງຊອບທໍາລະຫວ່າງຄົນໜຶ່ງ ແລະ ພີ່ນ້ອງຂອງເຂົາ, ແລະ ກັບຄົນຕ່າງຊາດທີ່ຢູ່ກັບເຂົານັ້ນ.
[17]ພວກທ່ານຈະບໍ່ສະແດງຄວາມລໍາອຽງຕໍ່ຜູ້ໃດໃນຂໍ້ພິພາກສາ; ພວກທ່ານຈະຟັງສຽງຄົນເລັກນ້ອຍ ແລະ ເໝືອນກັບສຽງຄົນທີ່ຍິ່ງໃຫຍ່.
ພວກທ່ານບໍ່ຢ້ານກົວໜ້າຂອງຜູ້ໃດ, ເພາະການພິພາກສາເປັນຂອງພຣະເຈົ້າ. ຂໍ້ພິພາກສາທີ່ຍາກແກ່ພວກທ່ານຈະຕັດສິນໄດ້ນັ້ນ,
ພວກທ່ານຈະນໍາມາຫາຂ້ານ້ອຍ, ແລະ ຂ້ານ້ອຍຈະຟັງຂໍ້ພິພາກສານັ້ນ.[18]ຂ້ານ້ອຍສັ່ງພວກທ່ານໃນຄັ້ງນັ້ນເຖິງທຸກສິ່ງທີ່ພວກທ່ານສົມຄວນເຮັດ.
[19]ພວກເຮົາໄດ້ເດີນທາງອອກຈາກໂຮເຣັບແລະ ໄດ້ຜ່ານເຂົ້າໄປໃນຖິ່ນທຸລະກັນດານອັນກວ້າງໃຫຍ່ ແລະ
ເປັນຕາຢ້ານຕາມທີ່ພວກທ່ານໄດ້ເຫັນນັ້ນ, ຊຶ່ງຢູ່ລະຫວ່າງທາງທີ່ພວກເຮົາຈະໄປຍັງປະເທດຮ່ອມພູເຂົາຂອງຄົນອາໂມຣິດ,
ຕາມທີ່ພຣະຢາເວພຣະເຈົ້າຂອງພວກເຮົາໄດ້ຊົງສັ່ງພວກເຮົາ; ແລະ ພວກເຮົາໄດ້ມາເຖິງທີ່ຄາເດັດບາເນຍ.
[20]ຂ້ານ້ອຍກ່າວແກ່ພວກທ່ານວ່າ,
'ພວກທ່ານໄດ້ມາຮອດປະເທດຮ່ອມພູເຂົາຂອງຄົນອາໂມຣິດຕາມທີ່ພຣະຢາເວພຣະເຈົ້າຂອງເຮົາໄດ້ປະທານໃຫ້ແກ່ພວກທ່ານ.[21]ເບິ່ງສາ,
ພຣະຢາເວພຣະເຈົ້າຂອງພວກທ່ານ ໄດ້ຊົງຕັ້ງດິນແດນນີ້ເອົາໄວ້ຕໍ່ໜ້າພວກທ່ານແລ້ວ; ຈົ່ງຂຶ້ນໄປ ແລະ ຍຶດຄອງດັ່ງທີ່ພຣະຢາເວ
ພຣະເຈົ້າແຫ່ງບັນພະບູລຸດຂອງພວກທ່ານໄດ້ກ່າວໄວ້ກັບພວກທ່ານ; ຢ່າຢ້ານ, ຫລື ທໍ້ຖອຍໃຈເລີຍ.'
[22]ພວກທ່ານໄດ້ມາຫາພວກຂ້ານ້ອຍ ແລະໄດ້ເວົ້າວ່າ, 'ໃຫ້ພວກເຮົາສົ່ງຜູ້ຊາຍໄປຂ້າງໜ້າພວກເຮົາ,
ເພື່ອພວກເຂົາຈະສອດແນມເບິ່ງດິນແດນນັ້ນໃຫ້ແກ່ພວກເຮົາ, ແລະ ນໍາຖ້ອຍຄໍາມາລາຍງານເຖິງວິທີການທີ່ພວກເຮົາຈະໂຈມຕີ,
ແລະກ່ຽວກັບເມືອງນັ້ນທີ່ພວກເຮົາຈະມາ.'[23]ຄໍາແນະນໍານັ້ນເປັນທີ່ພໍໃຈຂອງຂ້ານ້ອຍຢ່າງຫລາຍ; ຂ້ານ້ອຍຈຶ່ງຕັ້ງຊາຍສິບສອງຄົນ,
ຄົນໜຶ່ງຈາກທຸກເຜົ່າ.[24]ພວກເຂົາຈຶ່ງຫັນໜ້າແລະ ມຸ່ງໄປທີ່ປະເທດຮ່ອມພູເຂົາ, ມາເຖິງຮ່ອມພູເຂົາແຫ່ງເອັດຊະໂຄນ, ແລະ
ສອດແນມເບິ່ງດິນແດນນັ້ນ.
[25]ພວກເຂົານໍາຜົນຜະລິດທີ່ເກີດຈາກແຜ່ນດິນນັ້ນ ຖືມາໃນມືຂອງພວກເຂົາ ແລະ ໄດ້ນໍາລົງມາໃຫ້ແກ່ພວກເຮົາ.
ພວກເຂົາຍັງກັບມາລາຍງານພວກເຮົາອີກດ້ວຍວ່າ, 'ທີ່ນັ້ນເປັນດິນແດນທີ່ດີທີ່ພຣະຢາເວພຣະເຈົ້າຂອງພວກເຮົາ ຊົງປະທານໃຫ້ແກ່ພວກເຮົາ.'
[26]ແຕ່ພວກທ່ານປະຕິເສດທີ່ຈະໂຈມຕີ, ແລະ ຍັງກະບົດຕໍ່ພຣະບັນຊາຕໍ່ພຣະຢາເວພຣະເຈົ້າຂອງເຈົ້າ.
[27]ພວກທ່ານໄດ້ຈົ່ມວ່າໃນເຕັນຂອງພວກທ່ານ ແລະ ໄດ້ກ່າວວ່າ, 'ນີ້ເປັນເພາະພຣະຢາເວ ຊົງກຽດຊັງພວກເຮົາ
ພຣະອົງຈຶ່ງໄດ້ນໍາພວກເຮົາອອກມາຈາກດິນແດນເອຢິບ, ເພື່ອມອບພວກເຮົາເອົາໄວ້ໃນມືຂອງຄົນອາໂມຣິດໃຫ້ທໍາລາຍພວກເຮົາເສຍ.
[28]ພວກເຮົາສາມາດໄປທີ່ໃດໃນເວລານີ້? ພວກອ້າຍນ້ອງຂອງພວກເຮົາ ໄດ້ເຮັດໃຫ້ຫົວໃຈພີ່ນ້ອງຂອງເຮົາສະຫລາຍ, ໂດຍກ່າວວ່າ,
'ຄົນພວກນັ້ນໂຕໃຫຍ່ກວ່າ ແລະ ສູງກວ່າເຮົາຫລາຍ; ບັນດາເມືອງຂອງພວກເຂົາກໍ ໃຫຍ່ໂຕ ແລະ ມີກໍາລັງຫລາຍຈົນເຖິງສະຫວັນ;
ຍິ່ງກວ່ານັ້ນ ພວກເຮົາໄດ້ເຫັນພວກລູກຊາຍຂອງອານາຄິມຢູ່ທີ່ນັ້ນດ້ວຍ.'"
[29]ແລ້ວເຮົາກໍໄດ້ບອກເຈົ້າວ່າ, 'ຢ່າຢ້ານກົວ,ຢ່າຢ້ານພວກເຂົາເລີຍ,[30]ພຣະຢາເວພຣະເຈົ້າຂອງພວກທ່ານ, ຜູ້ຊົງນໍາໜ້າພວກທ່ານ,
ພຣະອົງຈະຊົງຕໍ່ສູ້ເພື່ອພວກທ່ານ, ດັ່ງທີ່ພຣະອົງໄດ້ຊົງເຮັດທຸກສິ່ງເພື່ອພວກທ່ານໃນເອຢິບຕໍ່ໜ້າຕໍ່ຕາພວກທ່ານ,[31]ແລະ
ເຊັ່ນກັນໃນຖິ່ນແຫ້ງແລ້ງທຸລະກັນດານ, ທີ່ພວກທ່ານໄດ້ເຫັນແລ້ວພຣະຢາເວພຣະເຈົ້າຂອງທ່ານ ຊົງອຸ້ມຊູພວກທ່ານ,
ຄືກັບຊາຍຄົນໜຶ່ງອຸ້ມຊູລູກຊາຍຂອງເຂົາໃນທຸກທີ່ທຸກແຫ່ງທີ່ພວກທ່ານໄປຈົນພວກທ່ານມາສະຖານທີ່ແຫ່ງນີ້.
[32]ແຕ່ເຖິງຢ່າງໃດຈາກຖ້ອຍຄໍານີ້ ພວກທ່ານກໍຍັງບໍ່ເຊື່ອພຣະຢາເວພຣະເຈົ້າຂອງພວກທ່ານ,[33]ຜູ້ຊົງນໍາທາງໄປທາງໜ້າພວກທ່ານ
ເພື່ອຊອກຫາທີ່ຢູ່ອາໄສໜຶ່ງ, ດ້ວຍໄຟໃນເວລາກາງຄືນ ແລະ
ດ້ວຍເມກໃນເວລາກາງເວັນເພື່ອຫາສະຖານທີ່ໜຶ່ງໃຫ້ກັບພວກທ່ານສໍາລັບຕັ້ງຄ້າຍ
[34]ພຣະຢາເວຊົງໄດ້ຍິນສຽງຖ້ອຍຄໍາຂອງພວກທ່ານ ແລະ ຊົງພຣະພິໂຣດ; ພຣະອົງຊົງສັນຍາ
ແລະກ່າວວ່າ[35]ແນ່ນອນຈະບໍ່ມີຄົນໃດທ່າມກາງຄົນເລົ່ານີ້ຊຶ່ງເປັນຄົນລຸ້ນທີ່ຊົ່ວຊ້າຈະໄດ້ເຫັນດິນແດນອັນປະເສີດຕາມທີ່ເຮົາໄດ້ສັນຍາເອົາໄວ້ຈະປະທານໃຫ້ແກ່ບັນ
ເຂົາຈະໄດ້ດິນແດນນັ້ນ ເຮົາຈະປະທານດິນແດນທີ່ເຂົາໄດ້ຢຽບຢ່າງນັ້ນແກ່ເຂົາ ແລະແກ່ບັນດາລູກຫລານຂອງເຂົາ
ເພາະເຂົາໄດ້ຕິດຕາມພຣະຢາເວຢ່າງເຕັມທີ່
[37]ເຊັ່ນດຽວກັນກັບພຣະເຈົ້າຢາເວຊົງພຣະພິໂຣດຕໍ່ຂ້ານ້ອຍເຫດເພາະພວກທ່ານດ້ວຍ, ພຣະອົງກ່າວວ່າ,
'ເຈົ້າເອງກໍຈະບໍ່ໄດ້ເຂົ້າໄປດິນແດນນັ້ນເຊັ່ນກັນ;[38]ໂຢຊວຍລູກຂອງນູນ, ຜູ້ຢືນຕໍ່ໜ້າເຈົ້ານີ້, ເຂົາຈະໄດ້ເຂົ້າໄປທີ່ນັ້ນ; ຈົ່ງໜູນໃຈເຂົາ,
ເພາະເຂົາຈະເປັນຜູ້ນໍາອິດສະຣາເອນໃຫ້ຮັບດິນແດນນັ້ນເປັນກໍາມະສິດ.
[39]ຍິ່ງກວ່ານັ້ນ, ບັນດາເດັກນ້ອຍໆຂອງພວກເຈົ້າ, ຄືບັນດາຄົນທີ່ພວກເຈົ້າກ່າວວ່າພວກເຂົາຈະຕົກເປັນເຫຍື່ອ,
ຜູ້ຊຶ່ງໃນວັນນີ້ບໍ່ມີຄວາມຮູ້ສຶກເຖິງສິ່ງດີ ຫລື ຊົ່ວ - ພວກເຂົາຈະໄປທີ່ນັ້ນ. ເຮົາຈະມອບດິນແດນນັ້ນໃຫ້ແກ່ພວກເຂົາ
ແລະພວກເຂົາຈະຄອບຄອງດິນແດນນັ້ນໃຫ້ແກ່ພວກເຂົາ, ແລະ ພວກເຂົາຈະຄອບຄອງດິນແດນນັ້ນ.[40]ແຕ່ສໍາລັບພວກເຈົ້າ, ຈົ່ງຫັນກັບ ແລະ
ເດີນທາງເຂົ້າໄປຖິ່ນທຸລະກັນດານຕາມທາງທີ່ຈະໄປທະເລແດງ.'
[41]ແລ້ວພວກທ່ານຕອບແກ່ຂ້ານ້ອຍວ່າ, 'ພວກເຮົາໄດ້ເຮັດບາບຕໍ່ພຣະຢາເວແລ້ວ; ພວກເຮົາຈະຂຶ້ນໄປ ແລະຕໍ່ສູ້, ແລະ
ພວກເຮົາຈະເຮັດຕາມທຸກສິ່ງພຣະຢາເວພຣະເຈົ້າຂອງພວກເຮົາໄດ້ຊົງສັ່ງໃຫ້ພວກເຮົາເຮັດ.'
ຜູ້ຊາຍທຸກຄົນໃນທ່າມກາງພວກທ່ານຕ່າງກໍເຮັດອາວຸດສໍາລັບເຮັດສົງຄາມ, ແລະ
ພວກທ່ານພ້ອມຈະເຂົ້າໂຈມຕີປະເທດຮ່ອມພູເຂົານັ້ນ[42]ພຣະຢາເວໄດ້ກ່າວວ່າ, 'ຈົ່ງບອກແກ່ພວກເຂົາວ່າ, ຢ່າເຂົ້າໂຈມຕີ ແລະຕໍ່ສູ້
ເພາະເຮົາຈະບໍ່ຢູ່ກັບພວກເຈົ້າ, ແລະ ພວກເຈົ້າຈະເອົາຊະນະສັດຕູ.'

[43]ຂ້ານ້ອຍກ່າວແກ່ພວກທ່ານແບບນີ້, ແຕ່ພວກທ່ານບໍ່ຍອມຟັງ. ພວກທ່ານຫັກຫລັງຕໍ່ຄຳສັ່ງຂອງພຣະຢາເວ;
ພວກທ່ານເຂົ້າໂຈມຕີປະເທດຮ່ອມພູເຂົານັ້ນ.[44]ແຕ່ຊາວອາໂມຣິດ, ຜູ້ອາໄສຢູ່ປະເທດຮ່ອມພູເຂົານັ້ນໄດ້ອອກມາຕໍ່ສູ້ກັບພວກທ່ານ ແລະ
ໄດ້ຂັບໄລ່ພວກທ່ານຄືຝູງເຜິ້ງ, ແລະ ໂຈມຕີພວກທ່ານໄລ່ລົງມາຈາກເຊຣະ, ຈົນເຖິງໂຮມາ.
[45]ພວກທ່ານກັບຄືນແລະຮ້ອງໄຫ້ຕໍ່ພຣະຢາເວ; ແຕ່ພຣະຢາເວບໍ່ຟັງສຽງພວກທ່ານ, ບໍ່ສົນໃຈພວກທ່ານເລີຍ.
[46]ດັ່ງນັ້ນພວກທ່ານຈຶ່ງຕ້ອງພັກອາໄສຢູ່ ທີ່ກາເດັດເປັນເວລາຫລາຍວັນ, ຕະຫລອດເວລາທີ່ພວກທ່ານອາໄສຢູ່ທີ່ນັ້ນ


generated on Tue Jun 17 19:01:42 2025

2 1ຕໍ່ມາພວກເຮົາຈຶ່ງກັບ ແລະ ເດີນທາງໄປໃນຖິ່ນແຫ້ງແລ້ງທຸລະກັນດານຕາມທາງສູ່ທະເລແດງ, ຕາມທີ່ພຣະຢາເວໄດ້ກ່າວກັບພວກຂ້ານ້ອຍ;
ພວກເຮົາໄດ້ຍ່າງອ້ອມພູເຂົາເຊຣະເປັນເວລາຫລາຍວັນ.2ພຣະຢາເວໄດ້ກ່າວແກ່ພວກຂ້ານ້ອຍ, ຄືວ່າ,
3'ພວກເຈົ້າໄດ້ຍ່າງອອ້ມພູເຂົານີ້ເປັນເວລາດົນພໍສົມຄວນແລ້ວ; ຈົ່ງຫັນໄປທາງທິດເຫນືອເທີ້ນ.

4ຈົ່ງສັ່ງປະຊາຊົນວ່າ, "ພວກເຈົ້າຈະຕ້ອງຍ່າງຜ່ານເຂດບ້ານເຮືອນຂອງພີ່ນ້ອງພວກເຈົ້າ, ຄືເຊື້ອສາຍຂອງເອຊາວ, ຜູ້ອາໄສຢູ່ໃນເຊຣະ;
ພວກເຂົາຈະຢ້ານພວກເຈົ້າ. ດັ່ງນັ້ນຈົ່ງລະວັງໃຫ້ດີ5ຢ່າຕໍ່ສູ້ພວກເຂົາ, ເພາະເຮົາຈະບໍ່ມອບດິນແດນໃດໆຂອງພວກເຂົາໃຫ້ແກ່ພວກເຈົ້າ, ບໍ່,
ຈະບໍ່ເຫັນແມ່ນແຕ່ພໍໄວ້ໃຫ້ຝາຕີນຢຽບຢໍ້າໄປ; ເພາະເຮົາໄດ້ມອບພູເຂົາເຊຣະໃຫ້ເອຊາວເປັນກຳມະສິດແລ້ວ.
6ພວກເຈົ້າຈົ່ງເອົາເງິນຊື້ອາຫານຈາກພວກເຂົາ, ເພື່ອພວກເຈົ້າຈະໄດ້ກິນ; ພວກເຈົ້າຈົ່ງເອົາເງິນຊື້ນໍ້າຈາກເຂົາດ້ວຍ, ເພື່ອພວກເຈົ້າຈະໄດ້ດື່ມ.
7ເພາະພຣະຢາເວໄດ້ຊົງອວຍພອນເຈົ້າໃນການງານແຫ່ງມືທຸກຢ່າງຂອງພວກເຈົ້າ;
ພຣະອົງໄດ້ຊົງຮູ້ເຖິງການຍ່າງຜ່ານຖິ່ນທຸລະກັນດານອັນກວ້າງໃຫຍ່ນີ້. ເພາະໃນເວລາສີ່ສິບປີເຫລົ່ານີ້ ພຣະຢາເວ
ພຣະເຈົ້າຂອງເຈົ້າໄດ້ຊົງສະຖິດກັບພວກເຈົ້າ, ແລະ ພວກເຈົ້າບໍ່ຂາດສິ່ງໃດໆເລີຍ."'
8ດັ່ງນັ້ນຈຶ່ງໄດ້ໄປຜ່ານພວກອ້າຍນ້ອງຂອງເຮົາ, ຄືເຊື້ອສາຍຂອງເອຊາວຜູ້ອາໄສໃນເຊຣະ, ອອກໄປຈາກເສັ້ນທາງອາຣາບາ, ແລະ
ຈາກເອຊີໂອນເກເບ. ແລ້ວພວກເຮົາຈຶ່ງຫັນກັບ ແລະ ຜ່ານໄປທາງຖິ່ນທຸລະກັນດານຂອງໂມອາບ.
9ພຣະຢາເວໄດ້ກ່າວແກ່ຂ້ານ້ອຍວ່າ, 'ຢ່າລົບກວນໂມອາບ, ແລະ ຢ່າເຮັດສົງຄາມກັບພວກເຂົາ.
ເພາະເຮົາຈະບໍ່ມອບດິນແດນຂອງເຂົາໃຫ້ແກ່ພວກເຈົ້າເປັນກຳມະສິດ, ເພາະເຮົາໄດ້ມອບເມືອງໃຫ້ແກ່ເຊື້ອສາຍຂອງໂລດ,
ເປັນກຳມະສິດຂອງພວກເຂົາແລ້ວ.'
10(ແຕ່ກ່ອນຫນ້ານີ້ເອມິມໄດ້ອາໄສຢູ່ທີ່ນັ້ນ, ເປັນຊົນຊາດໃຫຍ່, ຈຳນວນຫລາຍ, ແລະ ສູງຄືກັບຄົນອານາກິມ;
11ເຫລົ່ານີ້ຖືກນັບວ່າເປັນພວກເຣຟາອິມ, ຄືກັບຄົນອານາກິມ; ແຕ່ຄົນໂມອາບເອີ້ນພວກເຂົາວ່າເອມິມ.
12ມື້ກ່ອນພວກໂຮຣີກໍຢູ່ທີ່ເຊຣະດ້ວຍ, ແຕ່ເຊື້ອສາຍຂອງເອຊາວໄດ້ເອົາຊະນະພວກເຂົາ. ໄດ້ທຳລາຍພວກເຂົາຕໍ່ຫນ້າພວກເຂົາ ແລະ
ໄດ້ມາອາໄສຢູ່ແທນທີ່ພວກເຂົາ, ຄືກັບອິດສະຣາເອນກໍໄດ້ເຮັດຕໍ່ແຜ່ນດິນພຣະຢາເວໄດ້ຊົງມອບໃຫ້ພວກເປັນກຳມະສິດນັ້ນ.)
13"'ບັດນີ້ຈົ່ງລຸກຂຶ້ນ ແລະ ຂ້າມແມ່ນ້ຳເຊເຣັດ.' ດັ່ງນັ້ນພວກເຮົາຈຶ່ງຂ້າມແມ່ນ້ຳເຊເຣັດ.14ບັດນີ້ນັບຈາກທີ່ພວກເຂົາມາຈາກຄາເດັດບາເນຍ
ຈົນວ່າພວກເຮົາໄດ້ຂ້າມແມ່ນ້ຳເຊເຣັດແລ້ວ, ເປັນເວລາທັງຫມົດສາມສິບແປດປີ.
ໃນເວລານັ້ນເອງທີ່ຜູ້ຊາຍທັງຫມົດໃນຄົນລຸ້ນນັ້ນທີ່ຖືກຕຽມໄວ້ເພື່ອສູ້ຮົບໄດ້ຕາຍຈາກທ່າມກາງປະຊາຊົນ,
ຕາມທີ່ພຣະຢາເວໄດ້ຊົງສັນຍາແກ່ພວກເຂົາ.15ຫລາຍກວ່ານັ້ນ,
ມືຂອງພຣະຢາເວໄດ້ຊົງຕໍ່ສູ້ປະຊາຊົນລຸ້ນນັ້ນເພື່ອທຳລາຍເຂົາຈາກປະຊາຊົນຈົນກວ່າພວກເຂົາຈະຫມົດສິ້ນໄປ.
16ສິ່ງນີ້ໄດ້ເກີດຂຶ້ນ, ເມື່ອຜູ້ຊາຍທັງຫມົດໄດ້ກຽມໄວ້ເພື່ອການສູ້ຮົບໄດ້ຕາຍ ແລະ ຫມົດສິ້ນໄປທ່າມກາງປະຊາຊົນ,
17ແລ້ວພຣະຢາເວໄດ້ກ່າວກັບຂ້ານ້ອຍ, ວ່າ,18'ມື້ນີ້ພວກເຈົ້າຕ້ອງໄດ້ຍ່າງຜ່ານເມືອງອາຣະ, ເຂດແດນຂອງຄົນໂມອາບ.19ຢ່າກໍ່ກວນ ຫລື
ສູ້ຮົບກັບພວກເຂົາ; ເພາະເຮົາຈະບໍ່ມອບບດິນແດນໃດໆ ຂອງຄົນອຳໂມນໃຫ້ແກ່ເຈົ້າເປັນກຳມະສິດ;
ເນື່ອງຈາກເຮົາໄດ້ມອບດິນແດນນັ້ນໃຫ້ແກ່ເຊື້ອສາຍຂອງໂລດເປັນກຳມະສິດແລ້ວ.'"
20(ທີ່ນັ້ນຖືກນັບວ່າເປັນດິນແດນພວກເອຟຣາອິມ. ດ້ວຍພວກເອຟຣາອິມເຄີຍຢູ່ທີ່ນັ້ນກ່ອນ - ແຕ່ຄົນອຳໂມນເອີ້ນເຂົາວ່າຊຳຊຸມມິມ
-21ເປັນຊົນຊາດໃຫຍ່, ຈຳນວນຫລາຍ, ແລະ ສູງຄືຄົນອານາກິມ. ແຕ່ພຣະຢາເວໄດ້ຊົງທຳລາຍພວກເຂົາຕໍ່ຫນ້າຕໍ່ຕາຄົນອຳໂມນ, ແລະ
ຄົນອຳໂມນໄດ້ເອົາຊະນະພວກເຂົາ ແລະ ອາໄສຢູ່ທີ່ນັ້ນແທນພວກເຂົາ.22ພຣະຢາເວໄດ້ເຮັດສິ່ງນີ້ເພື່ອປະຊາຊົນຂອງເອຊາວ,
ຜູ້ອາໄສຢູ່ໃນເຊຣະ, ເມື່ອ ພຣະອົງໄດ້ທຳລາຍພວກໂຮຣີຕໍ່ຫນ້າຕໍ່ຕາພວກເຂົາ, ແລະ ໄດ້ເຂົ້າອາໄສແທນທີ່ພວກເຂົາຈົນເຖິງທຸກວັນນີ້.
23ຄືກັນກັບພວກອາວິມທີ່ອາໄສຢູ່ໃນຫມູ່ບ້ານຕ່າງໆ ໄປໄກຮອດກາຊາ, ຄົນເຄັບໂທຣິມ, ຊຶ່ງມາຈາກເກາະເຄັບໂທ, ໄດ້ທຳລາຍພວກເຂົາແລະ
ຕັ້ງຖິ່ນຖານແທນພວກເຂົາ.)
2424 ບັດນີ້ລຸກຂຶ້ນ, ອອກເດີນທາງ ແລະຂ້າມແມ່ນ້ຳອາກໂນນ; ເບິ່ງສາ, ເຮົາໄດ້ມອບສີໂຫນຊາວອາໂມຣິດ, ຜູ້ເປັນກະສັດແຫ່ງເຮັດຊະໂບນ,
ແລະ ດິນແດນຂອງເຂົາເອົາໄວ້ໃນມືຂອງພວກເຈົ້າຈົ່ງເລີ່ມຍຶດຄອງ, ແລະ ເຮັດສົງຄາມສູ້ຮົບນຳເຂົາ.25ມື້ນີ້ເຮົາຈະເລີ່ມໃສ່ຄວາມຢ້ານ ແລະ
ບ້າຄັ່ງຕໍ່ພວກເຈົ້າໃຫ້ກັບປະຊາຊົນທັງຫລາຍລຸ່ມຟ້າ; ພວກເຂົາຈະໄດ້ຍິນຂ່າວກ່ຽວກັບພວກເຈົ້າ ແລະ ຈະໂຕສັ່ນສະທ້ານແລະ
ເປັນທຸກທໍລະມານເນື່ອງຈາກພວກເຈົ້າ.'
26ເຮົາສົ່ງຜູ້ສົ່ງຂ່າວສານຈາກຖິ່ນແຫ້ງແລ້ງກັນດານເກເດໂມດ ໄປຍັງສີໂຫນ, ກະສັດແຫ່ງເຮັດຊະໂບນ, ພ້ອມກັບຖ້ອຍຄຳແຫ່ງສັນຕິສຸກ,
ກ່າວວ່າ, '27ຂໍໃຫ້ຕີນຂອງເຮົາຢຽບຜ່ານດິນແດນຂອງທ່ານ; ຂ້າພະເຈົ້າຈະເດີນໄປຕາມທາງຫລວງນັ້ນ; ຂ້າພະເຈົ້າຈະບໍ່ລ້ຽວໄປທາງຂວາ
ຫລືທາງຊ້າຍ.
28ທ່ານຈະຂາຍອາຫານໃຫ້ແກ່ເຮົາ, ເພື່ອເຮົາຈະໄດ້ກິນ; ແລະ ເພື່ອເອົາເງິນ, ທ່ານຈະຂາຍນ້ຳໃຫ້ເຮົາ, ເພື່ອເຮົາຈະໄດ້ດື່ມ;
ຂໍພຽງແຕ່ວ່າທ່ານໃຫ້ເຮົາຜ່ານຕາມທາງຂອງເຮົາເທົ່ານັ້ນ;29ຄືກັບບັນດາເຊື້ອສາຍຂອງເອຊາວ ຜູ້ອາໄສຢູ່ໃນເຊຣະ, ແລະ
ຄືກັບຊາວໂມອາບຜູ້ອາໄສຢູ່ໃນເມືອງເອຣະ, ໄດ້ເຮັດເພື່ອພວກເຮົາ;
ຈົນເຮົາໄດ້ຂ້າມແມ່ນ້ຳຈໍແດນເຂົ້າໄປໃນດິນແດນທີ່ພຣະຢາເວພຣະເຈົ້າຂອງເຮົາຊົງປະທານໃຫ້ແກ່ພວກເຮົາ.'
30ແຕ່ກະສັດສີໂຫນ, ແຫ່ງເຮັດຊະໂບນບໍ່ຍອມປ່ອຍພວກເຮົາໃຫ້ຜ່ານດິນຂອງເຂົາ;
ເພາະພຣະຢາເວພຣະເຈົ້າຂອງພວກທ່ານໄດ້ເຮັດໃຫ້ໃຈຂອງເຂົາແຂງກະດ້າງ ແລະ ເຮັດໃຫ້ໃຈຂອງເຂົາດື້ດຶງ,
ເພື່ອພຣະອົງຈະປາບເຂົາໃຫ້ພ່າຍແພ້ດ້ວຍຣິດອຳນາດຂອງພຣະອົງ, ຊຶ່ງພຣະອົງໄດ້ຊົງເຮັດແລ້ວໃນວັນນີ້.
31ພຣະເຈົ້າຢາເວໄດ້ກ່າວແກ່ຂ້ານ້ອຍວ່າ, 'ເບິ່ງສາ, ເຮົາໄດ້ມອບສີໂຫນ ແລະດິນແດນເຮົາໃຫ້ແກ່ເຈົ້າແລ້ວ;
ຈົ່ງເລີ່ມຕົ້ນຍຶດຄອງເພື່ອວ່າເຈົ້າຈະໄດ້ດິນແດນຂອງເຂົາເປັນກຳມະສິດ.'

[32]ແລ້ວສີໂຫນຈຶ່ງໄດ້ອອກມາຕໍ່ຕ້ານພວກເຮົາ, ເຂົາ ແລະ ປະຊາຊົນຂອງເຂົາທັງຫມົດ, ມາຕໍ່ສູ້ຢາຮາດ.
[33]ພຣະຢາເວພຣະເຈົ້າຂອງພວກເຮົາໄດ້ມອບເຂົາໃຫ້ພວກເຮົາ ແລະ ພວກເຮົາໄດ້ປາບເຂົາໃຫ້ພ່າຍແພ້ໄປ; ເຮົາຕີເຂົາຈົນຕາຍ,
ທັງບັນດາລູກຊາຍ, ແລະ ປະຊາຊົນຂອງເຂົາທັງຫມົດ.
[34]ເຮົາຢຶດຄອງເມືອງທັງຫມົດຂອງເຂົາໃນເວລານັ້ນ ແລະ ໄດ້ທຳລາຍທຸກເມືອງຢ່າງໂຫດຮ້າຍ - ບັນດາຊາຍ ແລະ ຍິງ ແລະເດັກນ້ອຍ;
ເຮົາບໍ່ປ່ອຍໃຫ້ໃຜລອດຊີວິດ.[35]ມີພຽງຝູງສັດທີ່ຢຶດມາເປັນຂອງພວກເຮົາ, ພ້ອມກັບຂອງຣິບເມືອງຕ່າງໆ ທີ່ເຮົາໄດ້ຢຶດມາ.
[36]ຈາກອາໂຣເອ, ຊຶ່ງຕັ້ງຢູ່ເທິງແຄມລຸ່ມແມ່ນ້ຳອາກໂນນ, ແລະ ຈາກເມືອງທີ່ຢູ່ໃນລຸ່ມແມ່ນ້ຳນັ້ນໄປຕາມທາງທຸກທາງຈົນຮອດແມ່ນ້ຳ,
ໄປຕາມທາງທຸກທາງຈົນເຖິງກີເລອາດ, ບໍ່ມີເມືອງໃດທີ່ສູງເກີນໄປສຳລັບພວກເຮົາ.
ພຣະຢາເວພຣະເຈົ້າຂອງເຮົາໄດ້ປະທານໄຊຊະນະໃຫ້ແກ່ພວກເຮົາເຫນືອສັດຕູທັງຫມົດທີ່ຢູ່ທາງຫນ້າພວກເຮົາ.
[37]ມັນເປັນພຽງແຜ່ນດິນຂອງເຊື້ອສາຍຄົນອຳໂມນທີ່ເຈົ້າບໍ່ໄດ້ເຂົ້າໄປ, ຄືທຸກຝັ່ງຂອງແມ່ນ້ຳຢັບໂບກ, ແລະ ເມືອງຕ່າງໆ
ໃນປະເທດຮ່ອມພູເຂົານັ້ນ - ທີ່ໃດໆກໍຕາມທີ່ພຣະຢາເວ ພຣະເຈົ້າຂອງເຮົາໄດ້ຊົງຫ້າມບໍ່ໃຫ້ພວກເຮົາໄປ.


generated on Tue Jun 17 19:01:42 2025

# 3

1ແລ້ວພວກເຮົາຈຶ່ງໄດ້ຫັນກັບ ແລະ ຂຶ້ນໄປຕາມທາງສູ່ບາຊານ. ກະສັດໂອກ, ແຫ່ງບາຊານ, ໄດ້ມາ ແລະໂຈມຕີເຮົາ, ເຂົາ ແລະ
ປະຊາຊົນຂອງເຂົາທັງຫມົດ, ມາຕໍ່ສູ້ທີ່ເອັດເຣອີ. 2ພຣະຢາເວເວົ້າກ່າວກັບຂ້ານ້ອຍວ່າ, 'ຢ່າຢ້ານເລີຍ;
ເພາະເຮົາໄດ້ມອບໄຊຊະນະເຫນືອເຂົາໃຫ້ເຈົ້າທັງຫມົດແລ້ວ ແລະ ໄດ້ວາງປະຊາຊົນທັງຫມົດ ແລະ
ດິນແດນຂອງເຂົາພາຍໃຕ້ການຄວບຄຸມຂອງເຈົ້າ. ພວກເຈົ້າຈະເຮັດກັບເຂົາເຫມືອນກັບທີ່ເຮັດຕໍ່ສີໂຫນ, ກະສັດຊາວອາໂມຣິດ,
ຜູ້ອາໄສຢູ່ເຮັດຊະໂບນ.'

3ດັ່ງນັ້ນພຣະຢາເວພຣະເຈົ້າຂອງເຮົາຈຶ່ງໄດ້ຊົງປະທານໄຊຊະນະເຫນືອກະສັດໂອກແຫ່ງບາຊານໃຫ້ແກ່ພວກເຮົາ, ແລະ
ປະຊາຊົນທັງຫມົດຂອງເຂົາຖືກວາງໄວ້ພາຍໃຕ້ການຄວບຄຸມຂອງພວກເຮົາ.
ພວກເຮົາຕໍ່ສູ້ພວກເຂົາຈົນບໍ່ມີແມ່ນແຕ່ຄົນດຽວໃນທ່າມກາງປະຊາຊົນຂອງເຂົາທີ່ຫລົງເຫລືອຢູ່.
4ພວກເຮົາໄດ້ຍຶດຄອງເມືອງທັງຫມົດຂອງເຂົາໃນເວລານັ້ນ; ບໍ່ມີແມ່ນແຕ່ເມືອງດຽວທີ່ເຮົາບໍ່ໄດ້ຍຶດຄອງມາຈາກພວກເຂົາ:
ຈຳນວນເມືອງຫົກສິບເມືອງ - ຄືທຸກພາກຂອງອັກໂກບ, ອານາຈັກຂອງໂອກໃນບາຊານ.
5ເຫລົ່ານີ້ຄືເມືອງປ້ອມທັງຫມົດທີ່ມີກຳແພງສູງ, ປະຕູໃຫຍ່, ແລະ ບານປະຕູ; ນອກຈາກນີ້ແມ່ນຫມູ່ບ້ານຈຳນວນຫລາຍທີ່ບໍ່ມີກຳແພງ.
6ພວກເຮົາໄດ້ທຳລາຍພວກເຂົາຈົນຫມົດສິ້ນ, ຄືກັບພວກເຂົາໄດ້ເຮັດຕໍ່ກະສັດສີໂຫນແຫ່ງເຮັດຊະໂບນ, ທຳລາຍເມືອງທຸກເມືອງຢ່າງຮາບຄາບ -
ທັງບັນດາຊາຍ ແລະ ຍິງ ລວມທັງເດັກນ້ອຍໆ. 7ແຕ່ຝູງສັດທັງຫມົດ ແລະ ເມືອງຕ່າງໆ, ພວກເຮົາໄດ້ຍຶດເປັນຂອງພວກເຮົາ.
8ໃນເວລານັ້ນພວກເຮົາໄດ້ຍຶດຄອງດິນແດນຈາກມືຂອງກະສັດທັງສອງຂອງຄົນອາໂມຣິດ, ຜູ້ອາໄສຢູ່ອີກຟາກຫນຶ່ງແມ່ນ້ຳຈໍແດນ,
ຈາກແມ່ນ້ຳອາກໂນນໄປຈົນເຖິງພູເຂົາເຮີໂມນ 9(ພູເຂົາເຮີໂມນນັ້ນ ຊາວຊີໂດນເອີ້ນວ່າ ສີຣີໂອນ, ແລະຊາວອາໂມຣິດເອີ້ນວ່າເສນີ) 10ແລະ
ເມືອງຕ່າງໆເປັນພູພຽງ, ກີເລອາດທັງຫມົດ, ແລະ ບາຊານທັງຫມົດ, ຕະຫລອດທຸກເສັ້ນທາງທີ່ໄປຮອດເມືອງສາເລກາ ແລະ ເມືອງເອັດເຣອີ,
ເມືອງຕ່າງໆ ຂອງອານາຈັກຂອງໂອກໃນບາຊານ."
11(ສຳລັບສ່ວນທີ່ເຫລືອຂອງພວກເອຟຣາອິມ, ມີພຽງກະສັດໂອກແຫ່ງບາຊານເທົ່ານັ້ນທີ່ເຫລືອລອດຢູ່. ເບິ່ງສາ!
ບ່ອນນອນຂອງເຂົາເປັນຕຽງເຫລັກ. ມັນບໍ່ໄດ້ຢູ່ໃນຣັບບາ, ບ່ອນທີ່ຂອງຊາວອຳໂມນອາໄສຢູ່ບໍ? ຕຽງນີ້ແມ່ນຍາວເກົ້າສອກ ແລະ ກວ້າງສີ່ສອກ,
ນີ້ຄືວິທີວັດຂະຫນາດຂອງປະຊາຊົນ.)
12"ດິນແດນນີ້ພວກເຮົາໄດ້ຍຶດມາເປັນກຳມະສິດໃນເວລານັ້ນ - ຈາກອາໂຣເອ, ຄືດິນແດນທີ່ຢູ່ໃກ້ລຸ່ມແມ່ນ້ຳອາກໂນນ, ແລະ
ເຄິ່ງຫນຶ່ງຂອງປະເທດຮ່ອມພູໃນກີເລອາດ, ແລະ ໃນເມືອງຕ່າງໆ - ດິນແດນເມືອງຕ່າງໆນັ້ນເຮົາໄດ້ມອບໃຫ້ເຜົ່າຣູເບັນ ແລະເຜົ່າກາດ.
13ສ່ວນທີ່ເຫລືອຂອງກີເລອາດ ແລະ ບາຊານທັງຫມົດ, ຄືອານາຈັກຂອງໂອກ,
ເຮົາໄດ້ມອບໃຫ້ເຜົ່າມານາເຊເຄິ່ງຫນຶ່ງຄືແຄ້ນທັງຫມົດຂອງອາໂກບ, ແລະ ບາຊານທັງຫມົດ.
(ອານາເຂດດຽວກັນນີ້ໄດ້ຖືກເອີ້ນວ່າເປັນດິນແດນຂອງພວກເອຟຣາອິມ.
14ຢາອີ, ຜູ້ເປັນຄົນໃນເຜົ່າມານາເຊ, ໄດ້ຮັບເອົາແຄວ້ນຫນຶ່ງຂອງອັກໂກບ ໄປຈົນເຖິງເຂດແດນຂອງຊາວເກຊູ ແລະ ຊາວມາອາກາ.
ເຂົາເອີ້ນຊື່ແຄວ້ນທັງຫມົດ, ແມ່ນແຕ່ບາຊານຕາມຊື່ຂອງເຂົາເອງແມ່ນ ຮາບວົດ ຢາອີ, ມາຈົນເຖິງວັນນີ້.)
15ຂ້ານ້ອຍໄດ້ມອບກີເລອາດໃຫ້ແກ່ມາກີ. 16ສຳລັບເຜົ່າຣູເບັນ
ແລະເຜົ່າກາດຂ້ານ້ອຍໄດ້ມອບອານາເຂດຈາກກີເລອາດໄປຈົນຮອດລຸ່ມແມ່ນ້ຳອາກໂນນ -
ຄືນັບຈາກຕອນກາງຂອງແມ່ນ້ຳເປັນເຂດແດນຂອງອານາເຂດ - ແລະໄປຈົນເຖິງແມ່ນ້ຳຢັບໂບກ, ເຊິ່ງເປັນເຂດແດນຂອງເຊື້ອສາຍອຳໂມນ.
17ເຂດແດນທີ່ອີກສ່ວນຫນຶ່ງຂອງແມ່ນ້ຳຈໍແດນເຊັ່ນກັນ, ຈາກດິນເນເລດໄປເຖິງທະເລແຫ່ງອາຣັບບາ (ນັ້ນແມ່ນ, ທະເລເກືອ)
ໄປຈົນເຖິງທາງລາກຂອງພູເຂົາປີສະກາໃນທິດຕາເວັນອອກ.
18ຂ້າພະເຈົ້າໄດ້ບັນຊາພວກທ່ານໃນເວລານັ້ນ, ກ່າວວ່າ,
'ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ມອບດິນແດນນີ້ໃຫ້ແກ່ພວກທ່ານເປັນກຳມະສິດ; ພວກທ່ານ, ຄືບັນດາຊາຍທີ່ເປັນນັກຮົບທັງຫມົດ,
ຈະຂ້າມໄປກ່ອນພີ່ນ້ອງຂອງພວກທ່ານ, ຄືປະຊາຊົນອິດສະຣາເອນ.
19ແຕ່ເມຍຂອງພວກທ່ານ, ລູກໆ ແລະ ຝູງສັດຂອງພວກທ່ານ (ຂ້ານ້ອຍຮູ້ວ່າພວກທ່ານມີຝູງສັດຈຳນວນຫລາຍ), ຈະຍັງຄົງຢູ່ໃນເມືອງຕ່າງໆ
ຂອງພວກທ່ານທີ່ເຮົາໄດ້ມອບໃຫ້ແກ່ພວກທ່ານນັ້ນ, 20ຈົນກວ່າພຣະຢາເວຈະປະທານການພັກສະຫງົບໃຫ້ແກ່ພີ່ນ້ອງຂອງພວກທ່ານ,
ຄືກັບພຣະອົງໄດ້ປະທານໃຫ້ແກ່ພວກທ່ານ,
ຈົນກວ່າເຂົາໄດ້ຍຶດຄອງດິນແດນຂອງພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງມອບໃຫ້ແກ່ພວກເຂົາຄືດິນແດນອີກຟາກຫນຶ່ງຂອງແມ່ນ້ຳຈໍແດນນັ້ນ;
ຈາກນັ້ນພວກທ່ານຄືພວກຜູ້ຊາຍທຸກຄົນ, ຈະກັບມາຍັງດິນແດນທີ່ເຮົາໄດ້ມອບໃຫ້ແກ່ພວກທ່ານແລ້ວນັ້ນ.'
21ເຮົາໄດ້ບັນຊາໂຢຊວຍໃນເວລານັ້ນ, ໂດຍກ່າວວ່າ,
'ສາຍຕາຂອງທ່ານໄດ້ເຫັນທຸກສິ່ງທີ່ພຣະຢາເວພຣະເຈົ້າຂອງທ່ານໄດ້ຊົງເຮັດກະສັດທັງສອງເຫລົ່ານີ້;
ພຣະຢາເວໄດ້ຊົງເຮັດຢ່າງດຽວກັນຕໍ່ທຸກອານາຈັກທີ່ທ່ານເຂົ້າໄປ. 22ທ່ານຈະບໍ່ຢ້ານພວກເຂົາ,
ເພາະພຣະຢາເວພຣະເຈົ້າຂອງທ່ານຊົງເປັນຜູ້ດຽວທີ່ຈະຕໍ່ສູ້ເພື່ອພວກທ່ານ.'
23ຂ້ານ້ອຍທູນວ່າຂໍພຣະຢາເວໃນເວລານັ້ນ, ໂດຍກ່າວວ່າ, 24'ໂອ້ພຣະຢາເວ,
ພຣະອົງໄດ້ຊົງເລີ່ມຕົ້ນສຳແດງແກ່ຜູ້ຮັບໃຊ້ຂອງພຣະອົງເຖິງຄວາມຍິ່ງໃຫຍ່ ແລະ ເຖິງມືອັນເຂັ້ມແຂງຂອງພຣະອົງ;
ຈະມີພະໃດໃນຟ້າສະຫວັນ ຫລື ໂລກນີ້ທີ່ສາມາດເຮັດພາລະກິດຢ່າງດຽວກັນກັບພຣະອົງໄດ້ເຮັດບໍ່, ແລະ
ສາມາດເຮັດພາລະກິດອັນຊົງຣິດໄດ້ຄືພຣະອົງ? 25ຂ້ານ້ອຍຂໍວິງວອນພຣະອົງ, ຂໍໃຫ້ຂ້ານ້ອຍຂ້າມໄປ ແລະ
ເບິ່ງເຫັນດິນແດນອັນປະເສີດທີ່ອີກຟາກຫນຶ່ງຂອງແມ່ນ້ຳຈໍແດນ, ເຫັນປະເທດຮ່ອມພູເຂົາທີ່ດີ, ແລະເຫັນເລບານອນດ້ວຍເຖີດ.'
26ແຕ່ພຣະຢາເວຊົງຄຽດຮ້າຍຂ້ານ້ອຍເຫດເພາະພວກທ່ານ; ພຣະອົງບໍ່ໄດ້ຟັງສຽງຂ້ານ້ອຍ. ພຣະຢາເວໄດ້ກ່າວແກ່ຂ້ານ້ອຍວ່າ,
'ໃຫ້ເລື່ອງນີ້ພໍແລ້ວສຳລັບເຈົ້າ - ຢ່າເວົ້າເລື່ອງນີ້ກັບເຮົາອີກຕໍ່ໄປ: 27ຈົ່ງຂຶ້ນໄປຍອດພູເຂົາປີສະກາ
ແລະເປີດຕາຂອງເຈົ້າເບິ່ງໄປຕາມທິດຕາເວັນຕົກ, ແລະທິດຕາເວັນອອກ; ຈົ່ງເບິ່ງດ້ວຍສາຍຕາຂອງເຈົ້າ, ເພາະເຈົ້າຈະບໍ່ໄດ້ຂ້າມແມ່ນ້ຳຈໍແດນ.

[28]ແຕ່ວ່າ, ຈົ່ງສັ່ງສອນໂຢຊວຍ ແລະ ຫນູນໃຈ ແລະເສີມກຳລັງເຂົາ, ເພາະເຂົາຈະຂ້າມນຳຫນ້າໄປກ່ອນປະຊາຊົນນີ້, ແລະ
ເຂົາຈະເຮັດໃຫ້ປະຊາຊົນໄດ້ຮັບດິນແດນທີ່ເຈົ້າຈະເບິ່ງເຫັນເປັນມໍລະດົກ.'[29]ດັ່ງນັ້ນພວກເຮົາຈຶ່ງຍັງຄົງຢູ່ໃນຮ່ອມພູເຂົາຝັ່ງກົງກັນຂ້າມກັບເບັດເປໂອ.

 generated on Tue Jun 17 19:01:42 2025

# 4

[1]ບັດນີ້, ອິດສະຣາເອນເອີຍ, ຈົ່ງຟັງກົດຫມາຍ ແລະ ຂໍ້ບັງຄັບທີ່ຂ້ານ້ອຍຈະສອນພວກທ່ານ, ເພື່ອການປະຕິບັດນັ້ນ;
ດັ່ງນັ້ນທ່ານອາດຈະມີຊີວິດ ແລະ ເຂົ້າໄປຍຶດຄອງດິນແດນທີ່ພຣະຢາເວ, ພຣະເຈົ້າຂອງບັນພະບູລຸດຂອງພວກທ່ານ,
ຈະຊົງມອບໃຫ້ພວກທ່ານ.[2]ພວກທ່ານຈະບໍ່ເພີ່ມເຂົ້າໄປໃນຖ້ອຍຄຳໃດໆທີ່ຂ້ານ້ອຍໄດ້ບັນຊາແກ່ພວກທ່ານ, ແລະ ຈະບໍ່ເຮັດໃຫ້ຫນ້ອຍລົງ,
ເພື່ອວ່າພວກທ່ານຈະຮັກສາຄຳບັນຍັດຕ່າງໆ ຂອງພຣະຢາເວພຣະເຈົ້າຂອງພວກທ່ານ ທີ່ຂ້ານ້ອຍໄດ້ສັ່ງພວກທ່ານນັ້ນ.

[3]ດວງຕາຂອງພວກທ່ານໄດ້ເຫັນສິ່ງທີ່ພຣະຢາເວໄດ້ຊົງເຮັດ ເນື່ອງຈາກພູເປອໍ;
ພຣະເຈົ້າຢາເວພຣະເຈົ້າຂອງພວກເຈົ້າໄດ້ທຳລາຍທຸກຄົນທີ່ຂາບໄຫວ້ພະບາອານໃນທີ່ນັ້ນ.[4]ແຕ່ພວກທ່ານ
ຜູ້ທີ່ຍຶດຫມັ້ນໃນພຣະຢາເວພຣະເຈົ້າຂອງພວກທ່ານກໍມີຊີວິດເຖິງທຸກວັນນີ້.
[5]ເບິ່ງສາ, ຂ້ານ້ອຍໄດ້ສອນກົດຫມາຍ ແລະ ກົດບັນຍັດທຸກຂໍ້ແກ່ພວກທ່ານ, ຕາມທີ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍໄດ້ສັ່ງສອນແກ່ຂ້ານ້ອຍ,
ເພື່ອພວກທ່ານບໍ່ຄວນຈະໄດ້ເຮັດຕາມໃນທ່າມກາງດິນແດນທີ່ພວກທ່ານກຳລັງເຂົ້າໄປຍຶດຄອງຢູ່ນັ້ນ.[6]ດັ່ງນັ້ນຈົ່ງຖືຮັກສາ ແລະ ເຮັດຕາມ; ແລະ
ເພາະນີ້ແມ່ນສະຕິປັນຍາ ແລະຄວາມເຂົ້າໃຈຂອງພວກທ່ານໃນສາຍຕາຂອງປະຊາຊົນຕ່າງໆ
ຜູ້ທີ່ຈະໄດ້ຍິນກ່ຽວກັບກົດຫມາຍເຫລົ່ານີ້ໂດຍເວົ້າວ່າ, 'ນີ້ແມ່ນຊົນຊາດອັນຍິ່ງໃຫຍ່ແມ່ນປະຊາຊົນທີ່ມີສະຕິປັນຍາ ແລະຄວາມເຂົ້າໃຈ.'
[7]ເພາະມີຊົນຊາດໃຫຍ່ອື່ນໃດທີ່ມີພຣະເຈົ້າອົງຫນຶ່ງທີ່ຢູ່ໃກ້ພວກເຂົາ, ຄືກັບພຣະຢາເວພຣະເຈົ້າຂອງພວກເຮົາ
ທີ່ພວກເຮົາຮ້ອງທູນຕໍ່ພຣະອົງໄດ້ທຸກເວລາບໍ?[8]ມີຊົນຊາດໃຫຍ່ອື່ນໃດທີ່ມີກົດຫມາຍ ແລະ
ຂໍ້ບັນຍັດທີ່ຊອບທຳຄືກັບກົດຫມາຍເຫລົ່ານີ້ທີ່ຂ້ານ້ອຍໄດ້ຕັ້ງໃຈໄວ້ຕໍ່ຫນ້າພວກທ່ານໃນມື້ນີ້ຢ່າງນັ້ນບໍ?
[9]ພຽງແຕ່ເອົາໃຈໃສ່ ແລະ ປົກປ້ອງຕົວຂອງທ່ານເອົາໄວ້ໃຫ້ດີ, ເພື່ອວ່າພວກທ່ານຈະບໍ່ລືມສິ່ງຕ່າງໆທີ່ດວງຕາຂອງພວກທ່ານໄດ້ເຫັນ,
ແລ້ວເພື່ອວ່າສິ່ງເຫລົ່ານີ້ຈະບໍ່ອອກໄປຈາກຫົວໃຈຂອງພວກທ່ານໃນທຸກວັນຂອງຊີວິດທ່ານ.
ແຕ່ຈົ່ງເຮັດໃຫ້ບັນດາລູກຫລານຂອງພວກທ່ານໄດ້ຮູ້ເຖິງສິ່ງເຫລົ່ານີ້ເຖີດ.
[10]ໃນວັນນີ້ທີ່ພວກທ່ານໄດ້ຢືນຕໍ່ຫນ້າພຣະຢາເວພຣະເຈົ້າຂອງພວກທ່ານທີ່ໂຮເຣັບ, ເມື່ອພຣະຢາເວໄດ້ກ່າວວ່າ,
'ຈົ່ງເອີ້ນປະຊາຊົນມາຊຸມນຸມຕໍ່ຫນ້າເຮົາ, ແລະ ເຮົາຈະເຮັດໃຫ້ເຂົາໄດ້ຍິນບັນດາຖ້ອຍຄຳຂອງເຮົາ,
ເພື່ອພວກເຂົາຈະໄດ້ຮຽນຮູ້ທີ່ຈະຢຳເກງເຮົາໃນທຸກວັນນີ້ທີ່ພວກເຂົາມີຊີວິດຢູ່ເທິງແຜ່ນດິນໂລກນີ້, ແລະ
ທີ່ພວກເຮົາຈະສອນໃຫ້ແກ່ບັນດາລູກຫລານຂອງພວກເຂົາ.'
[11]ພວກທ່ານໄດ້ເຂົ້າມາໃກ້ ແລະຢືນຢູ່ທີ່ພູເຂົານັ້ນ. ພູເຂົາດັ່ງກ່າວມີໄຟລຸກລາມຂຶ້ນໄປເທິງໃຈກາງຂອງທ້ອງຟ້າສະຫວັນ, ມີຄວາມມືດຄຶ້ມ,
ມີເມກ, ແລະ ຄວາມມືດຫນາແຫນ້ນ.[12]ພຣະຢາເວໄດ້ກ່າວກັບພວກທ່ານອອກມາຈາກກາງໄຟນັ້ນ;
ພວກທ່ານໄດ້ຍິນສຽງພ້ອມກັບບັນດາຖ້ອຍຄຳ, ແຕ່ພວກທ່ານບໍ່ໄດ້ເຫັນຮູບສັນນິຖານ ພວກທ່ານພຽງໄດ້ຍິນສຽງເທົ່ານັ້ນ.
[13]ພຣະອົງໄດ້ຊົງປະກາດຕໍ່ພວກທ່ານເຖິງພັນທະສັນຍາທີ່ພຣະອົງໄດ້ຊົງສັ່ງໃຫ້ປະຕິບັດຄື, ບັນຍັດສິບປະການ.
ພຣະອົງຊົງຂຽນບັນຍັດນັ້ນເທິງແຜ່ນຫີນສອງແຜ່ນ.[14]ພຣະຢາເວໄດ້ຊົງສັ່ງຂ້ານ້ອຍໃນເວລານັ້ນ, ເພື່ອສອນກົດບັນຍັດໃຫ້ແກ່ພວກທ່ານ,
ເພື່ອທ່ານໄດ້ເຮັດຕາມໃນດິນແດນທີ່ພວກທ່ານກຳລັງຂ້າມໄປເພື່ອຍຶດຄອງນັ້ນ.
[15]ພວກທ່ານຢ່າເຮັດຕົວເອງໃຫ້ເຊື່ອມເສຍ - ເພາະວ່າທ່ານບໍ່ໄດ້ເຫັນຮູບແບບໃດໃນມື້ທີ່ ພຣະຢາເວໄດ້ກ່າວກັບທ່ານທີ່ເຮໂຣ ອອກຈາກກາງໄຟ
-[16]ຈົ່ງໃຫ້ແນ່ໃຈວ່າພວກເຈົ້າບໍ່ເຮັດບາບ ແລະ ສ້າງຮູບເຄົາຣົບໃດໆ ສຳລັບພວກເຈົ້າເອງ, ບໍ່ວ່າຈະເປັນຮູບພະຜູ້ຊາຍ ຫລື ຍິງ,[17]ຫລື
ຮູບເຫມືອນສັດຊະນິດໃດໆ ທີ່ຢູ່ເທິງແຜ່ນດິນໂລກ, ຫລື ຮູບຄືນົກມີປີກບິນໃນທ້ອງຟ້າ,[18]ຫລືຮູບຄືສິ່ງໃດໆທີ່ເລືອຄານເທິງດິນ,
ຫລືຮູບຄືປາໃດໆທີ່ຢູ່ໃນນ້ຳໃຕ້ພື້ນດິນ.
[19]ພວກທ່ານຢ່າເປີດຕາພວກທ່ານເບິ່ງຂຶ້ນໄປເທິງຟ້າສະຫວັນ ແລະ ເບິ່ງທີ່ດວງຕາເວັນ, ດວງເດືອນ, ຫລື ດວງດາວຕ່າງໆ -
ຄືບໍລິເວນທັງຫມົດຂອງຟ້າສະຫວັນ - ແລະ ຖືກພາໃຫ້ນະມັດສະການສິ່ງເຫລົ່ານັ້ນ ແລະ
ບູຊາສິ່ງເຫລົ່ານັ້ນຄືສິ່ງຕ່າງໆເຫລົ່ານັ້ນທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ປະທານໃຫ້ປະຊາຊົນທຸກຄົນພາຍໃຕ້ທ້ອງຟ້າທັງຫມົດ.
[20]ແຕ່ພຣະຢາເວໄດ້ເອົາທ່ານ ແລະ ນຳທ່ານອອກມາຈາກເຕົາເຫລັກ, ຄືອອກຈາກເອຢິບ, ເພື່ອເປັນປະຊາຊົນທີ່ເປັນມໍລະດົກຂອງພຣະອົງເອງ,
ຢ່າງທີ່ພວກທ່ານເປັນຄືທຸກມື້ນີ້.
[21]ພຣະຢາເວຊົງໂກດຮ້າຍຂ້ານ້ອຍເຫດເພາະພວກທ່ານ; ພຣະອົງຊົງສັນຍາວ່າຂ້ານ້ອຍຈະບໍ່ຄວນຂ້າມແມ່ນ້ຳຈໍແດນ, ແລະ
ທີ່ຂ້ານ້ອຍບໍ່ສົມຄວນທີ່ຈະເຂົ້າໄປໃນດິນແດນອັນປະເສີດ,
ຄືດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະມອບໃຫ້ແກ່ພວກທ່ານເປັນກຳມະສິດນັ້ນ.[22]ແຕ່ຂ້ານ້ອຍຕ້ອງຕາຍໃນດິນແດນນີ້;
ຂ້ານ້ອຍຕ້ອງບໍ່ຂ້າມແມ່ນ້ຳຈໍແດນ; ແຕ່ພວກທ່ານຈະຂ້າມໄປ ແລະ ຄອບຄອງດິນແດນອັນປະເສີດນັ້ນ.
[23]ຈົ່ງລະວັງຕົວຂອງພວກທ່ານໃຫ້ດີ, ເພື່ອພວກທ່ານຈະບໍ່ໄດ້ຫລົງລືມພັນທະສັນຍາຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ທີ່ພຣະອົງຊົງເຮັດກັບພວກທ່ານ, ແລະ ສ້າງຮູບແກະສະຫລັກທີ່ເປັນຮູບຊົງໃດໆ
ເພື່ອຕົວຂອງພວກທ່ານເອງທີ່ພຣະຢາເວຂອງພວກທ່ານໄດ້ຊົງຫ້າມບໍ່ໃຫ້ພວກທ່ານເຮັດນັ້ນ.
[24]ເພາະພຣະຢາເວພຣະເຈົ້າຂອງພວກທ່ານຊົງເປັນໄຟທີ່ເຜົາຜານ, ແລະເປັນພຣະເຈົ້າຜູ້ຊົງຫວງແຫນ.
[25]ເມື່ອພວກທ່ານໃຫ້ກຳເນີດບັນດາລູກແລະ ຫລານທັງຫລາຍ, ເມື່ອພວກທ່ານຈະອາໄສຢູ່ໃນດິນແດນນັ້ນເປັນເວລາດົນ, ແລະ
ຖ້າພວກທ່ານຈະເຮັດຕົວໃຫ້ເຊື່ອມເສຍ ແລະ ສ້າງຮູບແກະສະຫລັກເປັນຮູບຊົງຂອງສິ່ງໃດໆ, ແລະ
ເຮັດສິ່ງຊົ່ວຮ້າຍໃນສາຍຕາພຣະຢາເວພຣະເຈົ້າຂອງພວກທ່ານ, ຊຶ່ງເປັນການຍົວະໃຫ້ພຣະອົງຊົງໂກດຮ້າຍ -[26]ຂ້ານ້ອຍຮ້ອງເຖິງຟ້າສະຫວັນ
ແລະແຜ່ນດິນໂລກໃຫ້ເປັນພະຍານຕໍ່ຕ້ານພວກທ່ານໃນວັນນີ້
ທີ່ບໍ່ຊ້ານານພວກທ່ານຈະພິນາດຢ່າງສິ້ນເຊີງຈາກແຜ່ນດິນທີ່ພວກທ່ານກຳລັງຈະຂ້າມແມ່ນ້ຳຈໍແດນໄປຄອບຄອງນັ້ນ;
ພວກທ່ານຈະບໍ່ໄດ້ຍືເວລາຂອງພວກທ່ານໃຫ້ຍາວນານແຕ່ພວກທ່ານຈະຖືກທຳລາຍຢ່າງຫມົດສິ້ນ.
[27]ພຣະຢາເວຈະເຮັດໃຫ້ພວກທ່ານກະຈັດກະຈາຍໄປທ່າມກາງປະຊາຊົນທັງຫລາຍ, ແລະ
ພວກທ່ານຈະເຫລືອພຽງຈຳນວນນ້ອຍໃນທ່າມກາງບັນດາປະຊາຊາດ, ທີ່ພຣະຢາເວຊົງນຳທ່ານໃຫ້ຈາກໄປນັ້ນ.

[28]ທີ່ນັ້ນພວກທ່ານຈະປະຕິບັດຮັບໃຊ້ບັນດາພະອື່ນ, ການງານແຫ່ງນ້ຳມືຂອງມະນຸດ, ຄືໄມ້ ແລະຫີນ, ທີ່ເບິ່ງບໍ່ເຫັນ ບໍ່ໄດ້ຍິນດ້ວຍຫູ, ກິນບໍ່ໄດ້, ຫລືດົມກິ່ນບໍ່ໄດ້.
[29]ແຕ່ຈາກທີ່ນັ້ນພວກທ່ານຈະສະແຫວງຫາພຣະຢາເວພຣະເຈົ້າຂອງພວກທ່ານ, ແລະ ພວກທ່ານຈະພົບພຣະອົງ,
ເມື່ອພວກທ່ານສະແຫວງຫາພຣະອົງດ້ວຍສຸດຈິດດ້ວຍສຸດໃຈຂອງພວກທ່ານ.
[30]ເມື່ອພວກທ່ານຢູ່ໃນຄວາມໂສກເສົ້າ, ແລະ ເມື່ອສິ່ງຕ່າງໆເຫລົ່ານີ້ທັງຫມົດມາເຫນືອພວກທ່ານ,
ໃນວັນເຫລົ່ານັ້ນຕໍ່ມາພວກທ່ານຈະຫັນກັບຫາພຣະຢາເວ ພຣະເຈົ້າຂອງພວກທ່ານ ແລະ ຟັງສຽງຂອງພຣະອົງ.
[31]ເພາະພຣະຢາເວພຣະເຈົ້າຂອງພວກທ່ານຊົງເປັນພຣະເຈົ້າຜູ້ຊົງເມດຕາ; ພຣະອົງຈະບໍ່ເຮັດໃຫ້ພວກທ່ານຜິດຫວັງຫລື ທຳລາຍພວກທ່ານ,
ຫລືຊົງລືມພັນທະສັນຍາຂອງບັນດາບັນພະບູລຸດຂອງພວກທ່ານທີ່ພຣະອົງໄດ້ຊົງສັນຍາເອົາໄວ້ກັບພວກເຂົາ.
[32]ບາດນີ້ຈົ່ງຖາມເຖິງວັນເຫລົ່ານັ້ນໃນອາດີດ, ຄືວັນທີ່ຢູ່ກ່ອນພວກທ່ານ: ນັບຈາກວັນນັ້ນທີ່ພຣະເຈົ້າໄດ້ຊົງສ້າງມະນຸດເທິງແຜ່ນດິນໂລກນີ້, ແລະ
ຈາກຟາກຟ້າຫນຶ່ງໄປຈົນເຖິງອີກຟາກຟ້າຫນຶ່ງ, ຈົ່ງຖາມວ່າເຄີຍມີສິ່ງໃດຄືກັບສິ່ງທີ່ຍິ່ງໃຫຍ່ນີ້, ຫລື ມີສິ່ງໃດທີ່ເຄີຍໄດ້ຍິນມາດັ່ງນີ້?
[33]ເຄີຍມີຄົນໄດ້ຍິນສຽງຂອງພຣະເຈົ້າທີ່ກ່າວອອກມາຈາກກາງໄຟຢ່າງທີ່ທ່ານໄດ້ຍິນ, ແລະ ຍັງມີຊີວິດຢູ່ແບບນີ້ບໍ?
[34]ຫລື ພຣະເຈົ້າເຄີຍທີ່ໄດ້ພະຍາຍາມໄປ ແລະ ນຳຊົນຊາດຫນຶ່ງມາເພື່ອພຣະອົງເອງຈາກທ່າມກາງຊົນຊາດຫນຶ່ງ, ດ້ວຍການລອງໃຈ,
ດ້ວຍຫມາຍສຳຄັນ, ແລະ ດ້ວຍການອັດສະຈັນ, ດ້ວຍສົງຄາມ, ດ້ວຍມືອັນຊົງຣິດ, ແລະ ດ້ວຍແຂນອັນຣິດເດດຂອງພຣະອົງທີ່ຢຽດອອກ,
ແລະ ດ້ວຍຄວາມຢ້ານກົວອັນຍິ່ງໃຫຍ່,
ຄືກັບທຸກສິ່ງທຸກຢ່າງທີ່ພຣະເຈົ້າຢາເວພຣະເຈົ້າຂອງທ່ານໄດ້ເຮັດເພື່ອທ່ານໃນປະເທດເອຢິບກ່ອນສາຍຕາຂອງທ່ານ?
[35]ສິ່ງຕ່າງໆເຫລົ່ານີ້ຊົງສຳແດງແກ່ພວກທ່ານ, ເພື່ອພວກທ່ານຈະຮູ້ວ່າ ພຣະຢາເວຊົງເປັນພຣະເຈົ້າ, ແລະ
ນອກຈາກພຣະອົງແລ້ວບໍ່ມີພະອື່ນໃດເລີຍ[36]ຈາກທ້ອງຟ້າ ພຣະອົງໄດ້ເຮັດໃຫ້ທ່ານໄດ້ຍິນສຽງຂອງພຣະອົງ,
ເພື່ອພຣະອົງຈະຊົງສັ່ງສອນພວກທ່ານ; ເທິງແຜ່ນດິນໂລກພຣະອົງໄດ້ເຮັດໃຫ້ພວກທ່ານເຫັນໄຟອັນໃຫຍ່;
ພວກທ່ານໄດ້ຍິນສຽງຂອງພຣະອົງອອກມາຈາກກອງໄຟອັນໃຫຍ່ນັ້ນ.
[37]ເພາະພຣະອົງໄດ້ຊົງຮັກສາບັນດາບັນພະບູລຸດຂອງພວກທ່ານ, ພຣະອົງຊົງເລືອກເຊື້ອສາຍທີ່ຕາມມາຂອງພວກເຂົາ,
ແລະໄດ້ນຳພວກທ່ານອອກມາຈາກເອຢິບພ້ອມກັບການຊົງສະຖິດຂອງພຣະອົງ, ພ້ອມກັບຣິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ;
[38]ເພື່ອຂັບໄລ່ຊົນຊາດທັງຫລາຍທີ່ຍິ່ງໃຫຍ່ກວ່າ ແລະ ເຂັ້ມແຂງກວ່າອອກໄປຕໍ່ຫນ້າຕໍ່ຕາຂອງພວກທ່ານ, ເພື່ອນຳພວກທ່ານເຂົ້າມາ,
ເພື່ອມອບດິນແດນຂອງພວກທ່ານໃຫ້ເປັນກຳມະສິດດັ່ງໃນທຸກວັນນີ້.
[39]ດັ່ງນັ້ນໃນວັນນີ້ຈົ່ງຮູ້ເຖິດ, ແລະ ວາງສິ່ງນີ້ເອົາໄວ້ໃຫ້ຫົວໃຈຂອງພວກທ່ານ, ວ່າພຣະຢາເວຊົງເປັນພຣະເຈົ້າໃນຟ້າສະຫວັນເບື້ອງເທິງ
ແລະເທິງແຜ່ນດິນໂລກ; ເບື້ອງລຸ່ມບໍ່ມີຜູ້ໃດອີກແລ້ວ.[40]ພວກທ່ານຈະຮັກສາບັນດາກົດຫມາຍຂອງພຣະອົງ ແລະ
ພຣະບັນຍັດທັງຫລາຍຂອງພຣະອົງທີ່ຂ້ານ້ອຍຊົງສັ່ງພວກທ່ານໃນວັນນີ້, ເພື່ອພວກທ່ານຈະໄປໄດ້ດີ
ແລະພ້ອມທັງບັນດາລູກຫລານທີ່ມາພາຍຫລັງພວກທ່ານດ້ວຍ, ແລະ
ເພື່ອວັນເວລາຂອງພວກທ່ານຈະຍືນຍາວໃນດິນແດນຂອງພຣະຢາເວພຣະເຈົ້າຂອງພວກທ່ານ ໃຫ້ແກ່ພວກທ່ານເປັນນິດ."
[41]ແລ້ວໂມເຊຈຶ່ງໄດ້ເລືອກເມືອງສາມເມືອງທາງຝັ່ງຕາເວັນອອກຂອງແມ່ນ້ຳຈໍແດນ,[42]ເພື່ອຄົນຈະຫລົບຫນີໄປໃນເມືອງໃດເມືອງຫນຶ່ງເຫລົ່ານີ້
ຖ້າຫາກເຂົາຂ້າຄົນໂດຍບໍ່ໄດ້ຕັ້ງໃຈ, ໂດຍບໍ່ໄດ້ເປັນສັດຕູກັນມາກ່ອນ. ໂດຍການຫນີໄປເມືອງໃດເມືອງຫນຶ່ງເຂົາຈະລອດຊີວິດ.[43]ເມືອງເຫລົ່ານີ້ຄື,
ເບເຊທີ່ເທິງພູພຽງສຳລັບເຜົ່າຣູເບັນແມ່ນເມືອງຣາໂມດ ໃນເຂດແດນຂອງກິເລອາດສຳລັບເຜົ່າກາດ; ແລະ ເມືອງໂກລານໃນບາຊານ,
ສຳລັບເຜົ່າມານັດເຊ.
[44]ນີ້ແມ່ນກົດຫມາຍທີ່ໂມເຊໄດ້ມອບກົດບັນຍັດທີ່ວາງໄວ້ຕໍ່ຫນ້າປະຊາຊົນອິດສະຣາເອນ;[45]ເຫລົ່ານີ້ຄືກົດຫມາຍທີ່ເປັນພັນທະສັນຍາ,
ກົດບັນຍັດຕ່າງໆ, ແລະ ກົດຫມາຍອື່ນໆທີ່ໂມເຊໄດ້ກ່າວແກ່ປະຊາຊົນອິດສະຣາເອນ ເມື່ອພວກເຂົາອອກມາຈາກເອຢິບ,
[46]ເມື່ອພວກເຂົາຢູ່ທາງຝັ່ງຕາເວັນອອກຂອງແມ່ນ້ຳຈໍແດນ, ໃນພູເຂົາກົງກັນຂ້າມເມືອງເບັດເປອໍ, ໃນດິນແດນສີໂຫນ, ຜູ້ເປັນກະສັດອາໂມ,
ຜູ້ອາໄສຢູ່ເຮັດຊະໂບນ, ຄືຜູ້ທີ່ໂມເຊ ແລະປະຊາຊົນອິດສະຣາເອນໄດ້ປາບໃຫ້ພ່າຍແພ້ເມື່ອພວກເຂົາອອກມາຈາກເອຢິບ.
[47]ພວກເຂົາຢຶດດິນແດນຂອງລາວໃຫ້ເປັນກຳມະສິດ, ແລະ ດິນແດນຂອງໂອກເປັນກະສັດແຫ່ງຊາບານ - ສິ່ງເຫລົ່ານີ້,
ຄືກະສັດທັງສອງຂອງຄົນອາໂມຣິດ, ຜູ້ຢູ່ອີກຟາກຫນຶ່ງຂອງແມ່ນ້ຳຈໍແດນໄປທາງທິດຕາເວັນອອກ.[48]ອານາເຂດນີ້ນັບຈາກອາໂຣເອ,
ໄປສຸດຂອບລຸ່ມແມ່ນ້ຳອາກໂນນ, ໄປຈົນເຖິງພູເຂົາສີຣີໂອນ (ຫລືພູເຮີໂມນ),[49]ແລະ
ລວມເອົາດິນແດນນັ້ນຍັງນັບລວມເອົາອານາເຂດທັງຫມົດຂອງແມ່ນ້ຳຈໍແດນ, ຈົນໄປຮອດທະເລອາຣາບາ, ໄປເຖິງຕາຍທີ່ຕີນພູປິສະກາ.


generated on Tue Jun 17 19:01:42 2025

# 5

1ໂມເຊໄດ້ເອີ້ນປະຊາຊົນອິດສະຣາເອນທັງຫມົດ ແລະ ກ່າວແກ່ພວກເຂົາວ່າ, "ອິດສະຣາເອນເອີຍ, ຈົ່ງຟັງກົດບັນຍັດ, ແລະ
ກົດເກນຕ່າງໆທີ່ຂ້ານ້ອຍຈະກ່າວໃຫ້ພວກທ່ານໄດ້ຍິນໃນວັນນີ້, ເພາະພວກທ່ານຈະຮຽນຮູ້ຖືຮັກສາເອົາໄວ້.
2ພຣະຢາເວພຣະເຈົ້າຂອງເຮົາໄດ້ເຮັດພັນທະສັນຍາຕໍ່ພວກໂຮເຣັບ. 3ພຣະຢາເວບໍ່ໄດ້ຊົງເຮັດພັນທະສັນຍານີ້ຕໍ່ກັບບັນພະບູລຸດຂອງພວກເຮົາ,
ແຕ່ຊົງເຮັດກັບພວກເຮົາ, ພວກເຮົາທຸກຄົນຍັງມີຊີວິດຢູ່ທຸກວັນນີ້.

4ພຣະຢາເວໄດ້ກ່າວກັບພວກທ່ານຫນ້າຕໍ່ຫນ້າ ທີ່ເທິງພູເຂົາອອກມາຈາກກາງໄຟນັ້ນ 5(ຂ້ານ້ອຍໄດ້ຢືນຢູ່ລະຫວ່າງພຣະຢາເວ
ກັບພວກທ່ານໃນເວລານັ້ນ, ເພື່ອເປີດເຜີຍຖ້ອຍຄຳຂອງພຣະອົງ; ໃນເວລານັ້ນໃຫ້ແກ່ພວກທ່ານ; ເພາະພວກທ່ານຢ້ານເນື່ອງຈາກໄຟນັ້ນ, ແລະ
ພວກທ່ານບໍ່ໄດ້ຂຶ້ນໄປພູເຂົາ). ພຣະຢາເວໄດ້ກ່າວ, 6'ເຮົາເປັນພຣະຢາເວ ພຣະເຈົ້າຂອງພວກເຈົ້າ, ຜູ້ນຳພວກເຈົ້າອອກມາຈາກດິນແດນເອຢິບ,
ອອກມາຈາກການເປັນທາດ.
7ພວກເຈົ້າຈະບໍ່ມີພະອື່ນໃດຕໍ່ຫນ້າເຮົາ. 8ພວກເຈົ້າຈະບໍ່ເຮັດຮູບສະຫລັກສຳລັບຕົວເອງ ຫລືຮູບຄືຂອງສິ່ງໃດໆທີ່ຢູ່ເທິງຟ້າເບື້ອງເທິງ,
ຫລືທີ່ຢູ່ເທິງແຜ່ນດິນເບື້ອງລຸ່ມ, ຫລືທີ່ຢູ່ໃນລຸ່ມນ້ຳນັ້ນ.
9ພວກເຈົ້າຈະບໍ່ກົ້ມກາບ ຫລື ຮັບໃຊ້ສິ່ງເຫລົ່ານັ້ນ, ເພາະເຮົາແມ່ນພຣະຢາເວພຣະເຈົ້າຂອງພວກເຈົ້າ, ຜູ້ຊົງຫວງແຫນ.
ເຮົາລົງໂທດຄວາມຊົ່ວຊ້າຂອງບັນດາບັນພະບູລຸດນັ້ນໂດຍການນຳການລົງໂທດມາເຖິງບັນດາລູກຫລານ, ຄືຊົ່ວລຸ້ນອາຍຸຄົນທີສາມ ແລະ
ສີ່ບັນດາຂອງບັນດາຄົນທີ່ກຽດຊັງເຮົາ, 10ແລະ ສຳແດງຄວາມສັດຊື່ຕາມພັນທະສັນຍາຕໍ່ບັນດາຄົນເຫລົ່ານັ້ນທີ່ຮັກເຮົາ
ຖືຮັກສາພຣະບັນຍັດທັງຫລາຍຂອງເຮົາ.
11ພວກເຈົ້າຈະບໍ່ຍົກພຣະນາມຂອງພຣະຢາເວພຣະເຈົ້າຂອງພວກເຈົ້າຢ່າງບໍ່ສົມຄວນ,
ເພາະພຣະຢາເວບໍ່ປ່ອຍໃຫ້ຄົນຍົກພະນາມຂອງພຣະຢາເວຢ່າງບໍ່ສົມຄວນໃຫ້ບໍ່ມີຄວາມຜິດ.
12ຈົ່ງຮັກສາວັນສະບາໂຕໃຫ້ເປັນວັນບໍຣິສຸດ, ດັ່ງທີ່ພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ຊົງສັ່ງພວກເຈົ້າ. 13ພວກເຈົ້າຈະອອກແຮງ ຫລື
ເຮັດວຽກທັງຫມົດຂອງເຈົ້າໃນເວລາຫົກວັນ; 14ແຕ່ວັນທີເຈັດຄືວັນສະບາໂຕ ຈົ່ງຖວາຍແດ່ພຣະຢາເວພຣະເຈົ້າຂອງພວກເຈົ້າ.
ໃນວັນນັ້ນພວກເຈົ້າຈະບໍ່ເຮັດວຽກໃດໆ - ບໍ່ວ່າໂຕເຈົ້າ, ຫລືລູກຊາຍຂອງພວກເຈົ້າ, ຫລືລູກສາວຂອງພວກເຈົ້າ, ຫລື ຂ້າທາດຊາຍ, ແລະ
ທາດຍິງ, ຫລື ງົວຂອງພວກເຈົ້າ, ຫລືລາຂອງພວກເຈົ້າ, ຫລືຝູງສັດໃດໆຂອງພວກເຈົ້າ, ຫລືຄົນຕ່າງຊາດຢູ່ທີ່ປະຕູຂອງພວກເຈົ້ານັ້ນ.
ສິ່ງນີ້ເພື່ອໃຫ້ຄົນຮັບໃຊ້ຊາຍ ແລະ ຄົນຮັບຍິງຂອງພວກເຈົ້າໄດ້ພັກຜ່ອນເຊັ່ນດຽວກັບພວກເຈົ້າ.
15ພວກເຈົ້າຈະລະນຶກເຖິງວ່າພວກເຈົ້າໄດ້ເປັນທາດໃນດິນແດນເອຢິບ, ແລະ
ພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ນຳພວກເຈົ້າອອກມາຈາກທີ່ນັ້ນໂດຍມືອັນຊົງຣິດ ແລະ ໂດຍແຂນທີ່ຢຽດອອກ.
ດ້ວຍເຫດນີ້ພຣະຢາເວພຣະເຈົ້າຂອງພວກເຈົ້າຈຶ່ງໄດ້ຊົງບັນຊາໃຫ້ພວກເຈົ້າຖືຮັກສາວັນສະບາໂຕ.
16ຈົ່ງໃຫ້ກຽດແກ່ບິດາ ແລະ ແກ່ມານດາຂອງພວກເຈົ້າ, ດັ່ງທີ່ພຣະຢາເວພຣະເຈົ້າຂອງເຈົ້າໄດ້ຊົງສັ່ງໃຫ້ພວກເຈົ້າເຮັດນັ້ນ,
ເພື່ອພວກເຈົ້າຈະມີຊີວິດຍືນຍາວຢູ່ແຜ່ນດິນທີ່ພຣະຢາເວຊົງປະທານໃຫ້ແກ່ພວກເຈົ້າ, ແລະ ເພື່ອພວກເຈົ້າຈະຢູ່ເຢັນເປັນສຸກ.
17ພວກເຈົ້າຈະບໍ່ຂ້າຄົນ. 18ພວກເຈົ້າຈະບໍ່ຮ່ວມປະເວນີ. 19ພວກເຈົ້າຈະບໍ່ລັກເລັກຂະໂມຍນ້ອຍ. 20ພວກເຈົ້າຈະບໍ່ໃສ່ຮ້າຍປ້າຍສີເພື່ອນບ້ານຂອງຕົນ.
21ພວກເຈົ້າຈະບໍ່ໄດ້ຍາດເມຍຂອງເພື່ອນບ້ານພວກເຈົ້າ, ພວກເຈົ້າຈະບໍ່ຢາກໄດ້ບ້ານຂອງເພື່ອນບ້ານ, ທົ່ງນາຂອງເຂົາ,
ຫລືຂ້າທາດຊາຍຂອງເຂົາ, ຫລື ທາດຍິງຂອງເຂົາງົວຜູ້ເຂົາ, ຫລືລາຂອງເຂົາ, ຫລືສິ່ງໃດໆ ທີ່ເປັນຂອງເພື່ອນບ້ານຂອງເຈົ້າ.'
22ຖ້ອຍຄຳເຫລົ່ານີ້ ພຣະຢາເວໄດ້ກ່າວດ້ວຍສຽງອັນດັງຕໍ່ຫນ້າຊຸມຊົນທັງຫມົດຂອງພວກທ່ານເທິງພູເຂົາອອກມາຈາກກາງໄຟ, ຈາກກ້ອນເມກ,
ແລະ ຈາກຄວາມມືດ; ພຣະອົງບໍ່ໄດ້ຊົງເພີ່ມເຕີມຖ້ອຍຄຳໃດໆອີກ. ພຣະອົງຊົງໄດ້ຂຽນຈາລຶກຖ້ອຍຄຳນັ້ນໄວ້ເທິງສີລາຈາລຶກສອງແຜ່ນ
ແລະໄດ້ປະທານໃຫ້ແກ່ພວກຂ້ານ້ອຍ.
23ຕໍ່ມາເມື່ອພວກທ່ານໄດ້ຍິນພຣະສຸລະສຽງກ່າວອອກມາຈາກທ່າມກາງຄວາມມືດ, ໃນຂະນະທີ່ພູເຂົານັ້ນກຳລັງລຸກໄຫມ້,
ຊຶ່ງທ່ານໄດ້ເຂົ້າມາໃກ້ຂ້ານ້ອຍຄື - ບັນດາຜູ້ອາວຸໂສທັງຫມົດຂອງພວກທ່ານ ແລະບັນດາຫົວຫນ້າເຜົ່າຕ່າງໆ ຂອງພວກທ່ານ.
24ພວກທ່ານກ່າວວ່າ, 'ເບິ່ງສາ, ພຣະຢາເວພຣະເຈົ້າຂອງພວກເຮົາໄດ້ຊົງສຳແດງພຣະສະຫງ່າຣາສີຂອງພຣະອົງ ແລະ
ຄວາມຍິ່ງໃຫຍ່ຂອງພຣະອົງແກ່ພວກເຮົາ, ແລະ ພວກເຮົາໄດ້ຍິນສຽງຂອງພຣະອົງມາຈາກກາງໄຟ;
ໃນວັນນີ້ພວກເຮົາໄດ້ເຫັນແລ້ວວ່າເມື່ອພຣະເຈົ້າກ່າວກັບປະຊາຊົນ, ພວກເຂົາສາມາດມີຊີວິດຢູ່.
25ແຕ່ເປັນຫຍັງພວກເຮົາຈຶ່ງບໍ່ສົມຄວນຕາຍ? ເພາະໄຟອັນໃຫຍ່ນີ້ຈະເຜົາຜານພວກເຮົາ;
ຖ້າພວກເຮົາໄດ້ຍິນສຽງຂອງພຣະຢາເວພຣະເຈົ້າຂອງພວກເຮົາດົນກວ່ານີ້, ພວກເຮົາຕ້ອງຕາຍແທ້. 26ເພາະນອກເຫນືອຈາກພວກເຮົາ ມີໃຜ
ຫລືໃນທ່າມກາງມະນຸດທັງຫມົດທີ່ໄດ້ຍິນສຽງຂອງພຣະເຈົ້າຜູ້ຊົງພຣະຊົນກ່າວອອກມາຈາກກາງໄຟ ແລະ ຍັງໄດ້ມີຊີວິດຢູ່,
ຄືຢ່າງພວກເຮົາໄດ້ເຮັດບໍ? 27ສຳລັບທ່ານນັ້ນ, ທ່ານຄວນໄປ ແລະຟັງທຸກສິ່ງທີ່ພຣະຢາເວພຣະເຈົ້າຂອງເຮົາກ່າວກັບທ່ານ;
ຢ້ຳຄືນທຸກສິ່ງທີ່ພຣະຢາເວພຣະເຈົ້າຂອງເຮົາກ່າວກັບທ່ານແກ່ພວກເຮົາ; ພວກເຮົາຈະຟັງ; ແລະ ເຮັດຕາມ.'
28ພຣະຢາເວໄດ້ຍິນຖ້ອຍຄຳຕ່າງໆ ຂອງພວກທ່ານ. ເມື່ອພວກທ່ານໄດ້ກ່າວແກ່ຂ້ານ້ອຍ, 'ພຣະອົງໄດ້ກ່າວກັບຂ້ານ້ອຍວ່າ
ເຮົາໄດ້ຍິນຖ້ອຍຄຳຕ່າງໆຂອງປະຊາຊົນນີ້, ໃນສິ່ງທີ່ພວກເຂົາກ່າວນັ້ນດີ. 29ໂອ, ຊຶ່ງມີຫົວໃຈເຊັ່ນນີ້ໃນພວກເຂົາ, ທີ່ພວກເຂົາຈະໃຫ້ກຽດແກ່ເຮົາ
ແລະຮັກສາພຣະບັນຍັດທັງຫມົດຂອງເຮົາສະເຫມີ, ເພື່ອພວກເຂົາ ແລະ ບັນດາລູກຫລານຂອງພວກເຂົາຈະຢູ່ເຢັນເປັນສຸກສືບໄປເປັນນິດ!
30ຈົ່ງໄປເວົ້າກັບພວກເຂົາວ່າ, "ຈົ່ງກັບໄປຍັງເຕັນຂອງພວກເຈົ້າເຖີດ."
31ແຕ່ສຳລັບເຈົ້າ, ຈົ່ງຢືນຢູ່ທີ່ນັ້ນກັບເຮົາ, ແລະ ເຮົາຈະບອກເຈົ້າເຖິງພຣະບັນຍັດທັງຫມົດກົດຫມາຍ, ແລະກົດເກນຕ່າງໆ
ທີ່ເຈົ້າຈະສອນພວກເຂົາ, ເພື່ອພວກເຂົາຈະຖືຮັກສາດິນແດນທີ່ເຮົາໄດ້ມອບໃຫ້ແກ່ພວກເຂົາເປັນກຳມະສິດດ້ວຍເຫດນີ້.'

[32]ພວກທ່ານຈະຖືຮັກສາ, ສິ່ງທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງບັນຊາແກ່ພວກທ່ານ
ພວກທ່ານຈະບໍ່ຫັນເຫໄປທາງຂວາຫລືຫັນເຫໄປທາງຊ້າຍ.
[33]ເພື່ອທ່ານຈະຍ່າງໃນທາງທີ່ພຣະເຈົ້າໄດ້ຊົງສັ່ງທ່ານ, ເພື່ອວ່າພວກທ່ານຈະມີຊີວິດຢູ່,
ແລະ ເພື່ອວ່າພວກທ່ານຈະຢູ່ເຢັນເປັນສຸກ, ແລະ ເພື່ອວ່າພວກທ່ານຈະມີວັນເວລາທີ່ຍືນຍາວໃນດິນແດນທີ່ພວກທ່ານໄດ້ເປັນກຳມະສິດນັ້ນ.


generated on Tue Jun 17 19:01:42 2025

6 [1]ດັ່ງນັ້ນເຫລົ່ານີ້ຄືຄຳສັ່ງ, ກົດບັນຍັດ, ແລະກົດເກນຕ່າງໆ ທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງສັ່ງພວກທ່ານ,
ເພື່ອວ່າພວກທ່ານຈະຖືຮັກສາໄວ້ໃນດິນແດນທີ່ພວກທ່ານກຳລັງຈະຂ້າມແມ່ນ້ຳຈໍແດນໄປເພື່ອຍຶດຄອງນັ້ນ;
[2]ເພື່ອວ່າພວກທ່ານຈະໃຫ້ກຽດພຣະຢາເວພຣະເຈົ້າຂອງພວກທ່ານ, ເມື່ອພວກທ່ານຖືຮັກສາພຣະບັນຍັດ ແລະ
ຄຳສັ່ງທັງຫລາຍຂອງພຣະອົງທີ່ຂ້ານ້ອຍກຳລັງສັ່ງພວກທ່ານ - ຄືພວກທ່ານ, ບັນດາລູກຊາຍຂອງພວກທ່ານ,
ຕະຫລອດທຸກວັນໃນຊີວິດຂອງພວກທ່ານ, ເພື່ອວັນເວລາຂອງພວກທ່ານຈະຍືນຍາວ.

[3]ດ້ວຍເຫດນີ້ອິດສະຣາເອນເອີຍ, ຈົ່ງຟັງຖ້ອຍຄຳເຫລົ່ານີ້, ແລະ ຖືຮັກສາເອົາໄວ້ເພື່ອວ່າພວກທ່ານ ຈະທະວີຄູນຂຶ້ນຢ່າງຫລວງຫລາຍ,
ໃນດິນແດນທີ່ມີນ້ຳນົມ ແລະ ນ້ຳເຜີ້ງໄຫລລົ້ນ, ຕາມທີ່ພຣະຢາເວ, ພຣະເຈົ້າຂອງບັນພະບູລຸດຂອງພວກທ່ານ,
ໄດ້ຊົງສັນຍາແກ່ພວກທ່ານວ່າຈະຊົງເຮັດ.
[4]ຈົ່ງຟັງເຖີດ, ອິດສະຣາເອນເອີຍ: ພຣະຢາເວພຣະເຈົ້າຂອງເຮົາຊົງເປັນພຣະເຈົ້າດຽວ.
[5]ພວກທ່ານຈົ່ງຮັກພຣະຢາເວຂອງພວກທ່ານດ້ວຍສຸດຈິດສຸດໃຈຂອງພວກທ່ານ, ແລະ ດ້ວຍສິ້ນສຸດກຳລັງຂອງພວກທ່ານ.
[6]ຖ້ອຍຄຳນີ້ທີ່ບອກເຖິງຂ້ານ້ອຍກຳລັງບັນຊາພວກທ່ານໃນມື້ນີ້ຈະຢູ່ໃນຫົວໃຈຂອງພວກທ່ານ;[7]ແລະ
ພວກທ່ານຈະຫມັ່ນສອນຖ້ອຍຄຳເຫລົ່ານີ້ໃຫ້ແກ່ບັນດາລູກຫລານຂອງພວກທ່ານ;
ພວກທ່ານຈະເວົ້າຖ້ອຍຄຳເຫລົ່ານີ້ເມື່ອພວກທ່ານນັ່ງຢູ່ໃນບ້ານຂອງພວກທ່ານ, ເມື່ອພວກທ່ານຍ່າງໄປຕາມຫົນທາງ, ເມື່ອພວກທ່ານນອນລົງ
ແລະ ເມື່ອພວກທ່ານລຸກຂຶ້ນ.
[8]ພວກທ່ານຈະຜູກຖ້ອຍຄຳເຫລົ່ານີ້ເປັນຄືເຄື່ອງຫມາຍຢູ່ເທິງມືຂອງພວກທ່ານ, ແລະ
ພວກເຂົາຈະຄຽນໄວ້ທີ່ຫນ້າຜາກລະຫວ່າງດວງຕາຂອງພວກທ່ານ.[9]ພວກທ່ານຈະຂຽນຖ້ອຍຄຳເຫລົ່ານີ້ເທິງວົງກົບປະຕູບ້ານຂອງພວກທ່ານ
ແລະເທິງປະຕູຮົ້ວຂອງພວກທ່ານ.
[10]ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານນຳພວກທ່ານເຂົ້າໄປໃນດິນແດນທີ່ພຣະອົງໄດ້ຊົງສັນຍາໄວ້ຕໍ່ບັນດາບັນພະບູລຸດຂອງພວກທ່ານ,
ຄືຕໍ່ອັບຣາຮາມ, ອີຊາກ, ແລະ ຕໍ່ຢາໂຄບ, ທີ່ພຣະອົງປະທານໃຫ້ແກ່ພວກທ່ານ, ພ້ອມກັບເມືອງຕ່າງໆທີ່ກວ້າງໃຫຍ່ ແລະ
ດີທີ່ສຸດຊຶ່ງພວກທ່ານບໍ່ໄດ້ສ້າງ.[11]ແລະ ບັນດາເຮືອນທີ່ເຕັມໄປດ້ວຍສິ່ງທີ່ດີທຸກຢ່າງຊຶ່ງພວກທ່ານບໍ່ໄດ້ເຮັດ, ບໍ່ນ້ຳຕ່າງໆທີ່ພວກທ່ານບໍ່ໄດ້ຂຸດ, ແລະ
ບັນດາສວນອະງຸ່ນ ກັບຕົ້ນຫມາກກອກເທດທີ່ທ່ານບໍ່ໄດ້ປູກ, ພວກທ່ານຈະກິນ ແລະ ຈົນອີ່ມຫນຳສຳລານ -[12]ດັ່ງນັ້ນຈົ່ງເອົາໃຈໃສ່ໃຫ້ດີ
ເພື່ອວ່າພວກທ່ານຈະບໍ່ຫລົງລືມພຣະຢາເວ, ຜູ້ຊົງໄດ້ນຳພວກທ່ານອອກຈາກເອຢິບ, ອອກຈາກເຮືອນແຫ່ງການເປັນທາດ.
[13]ພວກທ່ານຈະໃຫ້ກຽດພຣະຢາເວພຣະເຈົ້າຂອງພວກທ່ານ; ພວກທ່ານຈະນະມັດສະການພຣະອົງ, ແລະ
ພວກທ່ານຈະປະຕິຍານໂດຍພຣະນາມຂອງພຣະອົງ.[14]ພວກທ່ານຈະບໍ່ຕິດຕາມພະອື່ນ,
ບັນດາພະທັງຫລາຍຂອງປະຊາຊົນທີ່ຢູ່ອ້ອມຮອບພວກທ່ານ-[15]ເພາະພຣະຢາເວພຣະເຈົ້າຂອງພວກທ່ານຢູ່ທ່າມກາງພວກທ່ານນັ້ນເປັນພຣະເຈົ້າຜູ້ຊົງຫວງແຫນ-
ຖ້າພວກທ່ານເຮັດຄວາມໂກດຮ້າຍຂອງພຣະຢາເວພຣະເຈົ້າຂອງພວກທ່ານຈະພົ່ງຂຶ້ນໂຈມຕີພວກທ່ານ ແລະ
ພຣະອົງຈະທຳລາຍພວກທ່ານຈາກພື້ນແຜ່ນດິນໂລກ.
[16]ພວກທ່ານຈະບໍ່ທົດສອບພຣະຢາເວພຣະເຈົ້າຂອງພວກທ່ານ ເຫມືອນທີ່ພວກທ່ານໄດ້ທົດສອບພຣະອົງທີ່ມັດສາ.
[17]ພວກທ່ານຈະເຄັ່ງຄັດໃນການຖືຮັກສາພຣະບັນຊາຕ່າງໆ ຂອງພຣະຢາເວ ພຣະເຈົ້າຂອງພວກທ່ານ,
ພຣະບັນຍັດກ່ຽວເນື່ອງດ້ວຍພິທີຕ່າງໆຂອງພຣະອົງ, ແລະ ກົດບັນຍັດຂອງພຣະອົງ, ທີ່ພຣະອົງໄດ້ຊົງສັ່ງພວກທ່ານເອົາໄວ້.
[18]ພວກທ່ານຈະເຮັດສິ່ງທີ່ຖືກຕ້ອງ ແລະ ດີງາມໃນສາຍພຣະເນດຂອງພຣະຢາເວ, ເພື່ອພວກທ່ານຈະໄດ້ຢູ່ເຢັນເປັນສຸກ, ແລະ
ເພື່ອພວກທ່ານຈະເຂົ້າໄປ ແລະ ຍຶດຄອງດິນແດນອັນປະເສີດທີ່ພຣະຢາເວໄດ້ຊົງສັນຍາເອົາໄວ້ກັບບັນພະບູລຸດຂອງພວກທ່ານ,
[19]ເພື່ອຂັບໄລ່ສັດຕູທັງຫມົດທີ່ຢູ່ຕໍ່ຫນ້າຂອງພວກທ່ານ, ດັ່ງທີ່ພຣະຢາເວໄດ້ກ່າວໄວ້ນັ້ນ.
[20]ເມື່ອລູກຊາຍຂອງພວກທ່ານຖາມພວກທ່ານໃນເວລາທີ່ມາເຖິງ, ກ່າວວ່າ, 'ແມ່ນຫຍັງແມ່ນກົດເກນ, ກົດສັນຍາຕ່າງໆ, ຕາມພັນທະສັນຍາ,
ແລະ ກົດເກນອື່ນໆ ທີ່ພຣະຢາເວພຣະເຈົ້າຂອງເຮົາໄດ້ຊົງສັ່ງພວກທ່ານໄວ້?'[21]ແລ້ວພວກທ່ານຈະເວົ້າກັບລູກຊາຍຂອງທ່ານວ່າ,
'ພວກເຮົາໄດ້ເຄີຍຕົກເປັນທາດຟາໂຣໃນເອຢິບ; ພຣະຢາເວໄດ້ນຳເຮົາອອກຈາກເອຢິບດ້ວຍພຣະຫັດອັນຊົງຣິດ,[22]ແລະ
ພຣະອົງໄດ້ເຮັດຫມາຍສຳຄັນ, ແລະ ການອັດສະຈັນຕ່າງໆ, ຊົງເຮັດກິດຈະການອັນຍິ່ງໃຫຍ່ ແລະ ຮຸນແຮງ, ເຫນືອເອຢິບ, ເຫນືອຟາໂຣ,
ແລະ ເຫນືອຄົວເຮືອນທັງຫມົດຂອງເຂົາ, ຕໍ່ຫນ້າຕໍ່ຕາຂອງພວກເຮົາ;[23]ແລະ ພຣະອົງໄດ້ຊົງນຳເຮົາອອກຈາກທີ່ນັ້ນ,
ເພື່ອວ່າພຣະອົງຈະຊົງນຳພວກເຮົາເຂົ້າໄປຍັງດິນແດນຂອງພຣະອົງທີ່ພຣະອົງຊົງສັນຍາໄວ້ແກ່ບັນດາບັນພະບູລຸດຂອງພວກເຮົາຈະຊົງມອບໃຫ້ແກ່ພວກເຮົາ.
[24]ພຣະຢາເວໄດ້ຊົງສັ່ງເຮົາໃຫ້ຮັກສາພະບັນຍັດທັງຫລາຍນີ້ໄວ້, ເພື່ອໃຫ້ຢຳເກງພຣະຢາເວຂອງພວກເຮົາເພື່ອຜົນດີຂອງພວກເຮົາເອງ,
ເພື່ອພຣະອົງຈະຊົງຮັກສາພວກເຮົາໃຫ້ມີຊີວິດ, ດັ່ງທີ່ພວກເຮົາເປັນຢູ່ທຸກວັນນີ້.
[25]ຖ້າພວກເຮົາຖືຮັກສາພະບັນຍັດທັງຫລາຍເຫລົ່ານີ້ຕໍ່ຫນ້າພຣະຢາເວຂອງພວກເຮົາຕາມທີ່ພຣະອົງໄດ້ຊົງກ່າວເອົາໄວ້ກັບພວກເຮົານັ້ນ,
ສິ່ງນີ້ຈະເປັນຄວາມຊອບທຳຂອງພວກເຮົາ.'


generated on Tue Jun 17 19:01:42 2025

7 1 ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານຊົງນຳພວກທ່ານເຂົ້າມາດິນແດນທີ່ພວກທ່ານໄດ້ເປັນກຳມະສິດນັ້ນ,
ພຣະອົງຈະຊົງຂັບໄລ່ຊົນຊາດທັງຫລາຍທີ່ຢູ່ຕໍ່ຫນ້າຂອງພວກທ່ານ - ຄືຊາວຮິດຕີ, ເກຄາຊີ, ອາໂມຣິດ, ການາອານ, ເປຣີຊີ ຮີວີ, ແລະ
ເຢບຸດຊົນຊາດທີ່ໃຫຍ່ກວ່າ ແລະ ມີກຳລັງຫລາຍກວ່າພວກທ່ານ.

2 ພຣະຢາເວຂອງພວກທ່ານປະທານຊົນຊາດໃຫຍ່ເຫລົ່ານັ້ນໃຫ້ແກ່ພວກທ່ານເມື່ອພວກທ່ານຮົບຊະນະພວກເຂົາ, ແລະ
ພວກທ່ານຕ້ອງທຳລາຍພວກເຂົາໃຫ້ຫມົດ. ພວກທ່ານຈະບໍ່ເຮັດພັນທະສັນຍາໃດໆກັບພວກເຂົາ, ແລະ ບໍ່ສຳແດງຄວາມເມດຕາຕໍ່ເຂົາເລີຍ.
3 ພວກທ່ານຢ່າໄດ້ແຕ່ງງານໃດໆກັບພວກເຂົາ. ພວກທ່ານຈະບໍ່ມອບບັນດາລູກຜູ້ຍິງຂອງພວກທ່ານໃຫ້ແກ່ບັນດາລູກຊາຍຂອງພວກເຂົາ, ແລະ
ພວກທ່ານຈະບໍ່ນຳບັນດາລູກຜູ້ຍິງຂອງເຂົາໃຫ້ແກ່ລູກຜູ້ຊາຍຂອງທ່ານ.
4 ເພາະພວກເຂົາຈະເຮັດໃຫ້ບັນດາລູກຊາຍຂອງພວກທ່ານຫັນເຫໄປຈາກການຕິດຕາມເຮົາ, ເພື່ອພວກເຂົາຈະນະມັດສະການພະອື່ນ.
ແລ້ວຄວາມໂກດຮ້າຍຂອງພຣະຢາເວຈະພຸ້ງຂຶ້ນໂຈມຕີພວກທ່ານ, ແລະ ພຣະອົງຈະຊົງທຳລາຍພວກທ່ານຢ່າງໄວ.
5 ນີ້ຄືວິທີການທີ່ພວກທ່ານຈະຈັດການກັບພວກເຂົາ: ພວກທ່ານຈະທຳລາຍແທ່ນບູຊາຂອງພວກເຂົາ, ທຸບບັນດາເສົາຫີນຂອງພວກເຂົາຈົນຫມຸ່ນ,
ແລະ ເຜົາບັນດາເຄຣຸບຂອງພວກເຂົາເສຍ.
6 ເພາະພວກທ່ານເປັນຊົນຊາດຫນຶ່ງທີ່ໄດ້ຮັບການແຍກໄວ້ສຳລັບພຣະຢາເວພຣະເຈົ້າຂອງພວກທ່ານ.
ພຣະອົງຊົງໄດ້ເລືອກພວກທ່ານໃຫ້ເປັນປະຊາຊົນທີ່ພຣະອົງໄດ້ຄອບຄອງ, ຍິ່ງກວ່າຊົນຊາດອື່ນໃດທັງຫມົດທີ່ຢູ່ເທິງພື້ນແຜ່ນດິນໂລກນີ້.
7 ພຣະຢາເວບໍ່ໄດ້ຮັກພວກທ່ານຫລືຊົງເລືອກພວກທ່ານເພາະພວກທ່ານມີຈຳນວນຫລາຍກວ່າຊົນຊາດໃດໆ -
ແຕ່ເພາະພວກທ່ານເປັນຈຳນວນຄົນທີ່ມີຈຳນວນຫນ້ອຍທີ່ສຸດ - 8 ແຕ່ເພາະພຣະອົງຊົງຮັກສາພວກທ່ານ, ແລະ
ຮັກສາຄຳສັນຍາທີ່ພຣະອົງໄດ້ຊົງເຮັດເອົາໄວ້ແກ່ບັນດາບັນພະບູລຸດຂອງພວກທ່ານ.
ນີ້ຈຶ່ງເປັນສາເຫດທີ່ພຣະຢາເວໄດ້ຊົງນຳພວກທ່ານອອກມາດ້ວຍມືອັນຊົງຣິດ ແລະ ໄດ້ໄຖ່ພວກທ່ານ, ອອກຈາກເຮືອນທາດຂອງຟາໂຣ,
ກະສັດແຫ່ງເອຢິບ.
9 ດ້ວຍເຫດນີ້ຈຶ່ງຮູ້ຈັກພຣະຢາເວຂອງພວກທ່ານ - ພຣະອົງຊົງເປັນພຣະເຈົ້າ, ພຣະເຈົ້າຜູ້ຊົງສັດຊື່, ຜູ້ຊົງຮັກສາພັນທະສັນຍາ ແລະ
ຄວາມສັດຊື່ໄປຈົນເປັນພັນຊົ່ວອາຍຸສຳລັບຜູ້ທີ່ຮັກພຣະອົງ ແລະ ຮັກສາບັນຍັດທັງຫລາຍຂອງພຣະອົງ,
10 ແຕ່ຊົງຕອບສະຫນອງບັນດາຄົນເຫລົ່ານັ້ນທີ່ກຽດຊັງພຣະອົງຕໍ່ຫນ້າຂອງພວກເຂົາ, ຊົງທຳລາຍພວກເຂົາ;
ພຣະອົງບໍ່ໄດ້ຊົງປານີຕໍ່ຄົນໃດທີ່ກຽດຊັງພຣະອົງ; ພຣະອົງຈະຊົງຕອບສະຫນອງຕໍ່ຫນ້າຂອງເຂົາເອງ. 11 ດ້ວຍເຫດນີ້ພວກທ່ານຈະຖືຮັກສາຄຳສັ່ງ,
ກົດບັນຍັດ, ແລະກົດເກນທັງຫລາຍທີ່ຂ້ານ້ອຍສັ່ງພວກທ່ານໃນມື້ນີ້ ເພື່ອພວກທ່ານຈະເຮັດຕາມຖ້ອຍຄຳເຫລົ່ານີ້.
12 ຖ້າຫາກພວກທ່ານຟັງກົດເກນຕ່າງໆເຫລົ່ານີ້, ແລະ ຖືຮັກສາເຮັດຕາມສິ່ງເຫລົ່ານີ້,
ຈະເກີດຂຶ້ນແນ່ນອນເພາະພຣະຢາເວຊົງຮັກສາພັນທະສັນຍາ ແລະ ຄວາມສັດຊື່ທີ່ພຣະອົງໄດ້ຊົງສັນຍາແກ່ບັນພະບູລຸດຂອງພວກທ່ານ.
13 ພຣະອົງຊົງຮັກສາພວກທ່ານ, ຊົງອວຍພອນພວກທ່ານ, ແລະ ໃຫ້ພວກທ່ານມີຈຳນວນທະວີຄູນ; ພຣະອົງຊົງອວຍພອນຜົນຈາກຮ່າງກາຍທ່ານ
ແລະຜົນຈາກແຜ່ນດິນຂອງພວກທ່ານ, ພືດຜົນຂອງພວກທ່ານ, ເຫລົ້າອະງຸ່ນໃຫມ່ຂອງພວກທ່ານ ແລະ ນ້ຳມັນຂອງພວກທ່ານ,
ຊົງເພີ່ມພູນຝູງສັດຂອງພວກທ່ານ,
ໃນດິນແດນທີ່ພຣະອົງຊົງສັນຍາໄວ້ແກ່ບັນດາບັນພະບູລຸດຂອງພວກທ່ານວ່າຈະປະທານໃຫ້ແກ່ພວກທ່ານນັ້ນ.
14 ພວກທ່ານຈະໄດ້ຮັບການອວຍພອນຫລາຍຂຶ້ນກວ່າຊົນຊາດອື່ນໆທັງຫມົດ; ຈະບໍ່ມີຜູ້ຊາຍທີ່ເປັນຫມັນ ແລະ
ຜູ້ຍິງທີ່ເປັນຫມັນທ່າມກາງພວກທ່ານ ຫລື ທ່າມກາງຝູງສັດພວກທ່ານ. 15 ພຣະຢາເວຈະກຳຈັດໂລກໄພທັງຫລາຍອອກໄປຈາກພວກທ່ານ;
ຈະບໍ່ມີໂລກຮ້າຍຂອງເອຢິບທີ່ພວກທ່ານໄດ້ຮູ້ຈັກທີ່ພຣະອົງຈະເຮັດໃຫ້ເກີດຂຶ້ນກັບພວກທ່ານ,
ແຕ່ພຣະອົງຈະເຮັດໃຫ້ເກີດຂຶ້ນກັບບັນດາຄົນເຫລົ່ານັ້ນທີ່ຊັງພວກທ່ານ.
16 ພວກທ່ານຈະທຳລາຍປະຊາຊົນທັງຫມົດທີ່ພຣະຢາເວພຣະເຈົ້າຂອງພວກທ່ານປະທານໄຊຊະນະໃຫ້ແກ່ພວກທ່ານ, ແລະ
ໃນຕາຂອງພວກທ່ານຈະບໍ່ມີຄວາມສົງສານ. ພວກທ່ານຈະບໍ່ນະມັດສະການພະຕ່າງໆຂອງພວກເຂົາ, ເພາະນັ້ນຈະເປັນກັບດັກສຳລັບພວກທ່ານ.
17 ຖ້າພວກທ່ານກ່າວໃນໃຈຂອງພວກທ່ານວ່າ, 'ຊົນຊາດຕ່າງໆເຫລົ່ານີ້ມີຈຳນວນຫລາຍກວ່າເຮົາ;
ແລ້ວເຮົາຈະຂັບໄລ່ພວກເຂົາໄປໄດ້ແນວໃດ?'— 18 ຢ່າຢ້ານພວກເຂົາເລີຍ; ເພາະພວກທ່ານຈະລະນຶກເຖິງພຣະຢາເວພຣະເຈົ້າຂອງພວກທ່ານ
ໄດ້ຊົງເຮັດກັບຟາໂຣ ແລະ ຕໍ່ເອຢິບນັ້ນ; 19 ການທົນທຸກຄັ້ງໃຫຍ່ໃນຕາຂອງພວກທ່ານໄດ້ເຫັນ, ຫມາຍສຳຄັນ, ການອັດສະຈັນອັນຊົງຣິດ
ແລະມືທີ່ຢຽດອອກທີ່ພຣະຢາເວພຣະເຈົ້າຂອງພວກເຮົາໄດ້ນຳພວກທ່ານ ຈະຊົງເຮັດຢ່າງດຽວກັນຕໍ່ບັນດາຊົນຊາດທັງຫມົດທີ່ພວກທ່ານຢ້ານ.
20 ຍິ່ງໄປກວ່ານັ້ນ, ພຣະຢາເວພຣະເຈົ້າຂອງພວກທ່ານຈະສົ່ງຝູງຕໍ່ມາທ່າມກາງພວກເຂົາ, ຈົນກວ່າບັນດາຄົນເຫລົ່ານັ້ນທີ່ຫລົງເຫລືອ ແລະ
ລີ້ຢູ່ຈາກພວກທ່ານຈະຖືກກຳຈັດໄປຫມົດຕໍ່ຫນ້າພວກທ່ານ. 21 ພວກທ່ານຈະບໍ່ຢ້ານພວກເຂົາ,
ເພາະພຣະຢາເວພຣະເຈົ້າຂອງທ່ານຊົງຢູ່ທ່າມກາງຂອງພວກທ່ານ, ພຣະເຈົ້າຊົງຍິ່ງໃຫຍ່ແລະ ຫນ້າຢຳເກງ.
22 ພຣະຢາເວພຣະເຈົ້າຂອງທ່ານຈະຊົງຂັບໄລ່ຊົນຊາດຕ່າງໆ ເຫລົ່ານັ້ນຕໍ່ຫນ້າພວກທ່ານ ເທື່ອລະຫນ້ອຍ.
ພວກທ່ານຈະບໍ່ໄດ້ສູ້ຮົບຊະນະພວກເຂົາໃນຄັ້ງດຽວ, ຫລື ສັດປ່າທັງຫລາຍທີ່ຢູ່ອ້ອມຮອບພວກທ່ານຈະເພີ່ມຫລາຍຂຶ້ນ.
23 ແຕ່ພຣະຢາເວພຣະເຈົ້າຂອງພວກທ່ານຈະປະທານໄຊຊະນະເຫນືອເຂົາເມື່ອພວກທ່ານຈະປະເຊີນຫນ້າຂອງພວກເຂົາໃນສົງຄາມ;
ພຣະອົງຈະຊົງເຮັດໃຫ້ພວກເຂົາສັບສົນຢ່າງຫລາຍຈົນພວກເຂົາຖືກທຳລາຍ.
24 ພຣະອົງຊົງເຮັດໃຫ້ບັນດາກະສັດຂອງພວກເຂົາຕົກຢູ່ໃຕ້ອຳນາດຂອງພວກທ່ານ, ແລະ ພວກທ່ານຈະກຳຈັດຊື່ຂອງພວກເຂົາອອກໄປ.
ບໍ່ໃຫ້ເຫລືອແມ່ນແຕ່ຄົນດຽວ ທ່ານຈະສາມາດຢືນຢັນຕໍ່ຫນ້າພວກເຂົາຈົນຫມົດ.
25 ພວກທ່ານຈະເຜົາຮູບແກະສະຫລັກຕ່າງໆຂອງພວກເຂົາ - ຢ່າຄິດຢາກໄດ້ເງິນຫລືທອງເຫລົ່ານັ້ນ ແລະນຳມາເປັນຂອງທ່ານ,
ເພາະຖ້າພວກທ່ານເຮັດແນວນັ້ນ ທ່ານຈະຕິດກັບດັກຂອງມັນເພາະສິ່ງເຫລົ່ານັ້ນເປັນທີ່ຫນ້າກຽດຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
26 ພວກທ່ານບໍ່ນຳສິ່ງຫນ້າກຽດໃດໆເຂົ້າມາບ້ານຂອງພວກທ່ານ ແລະ ເລີ່ມຕົ້ນນະມັດສະການສິ່ງນັ້ນ. ພວກທ່ານຈະລັງກຽດ ແລະ
ຊັງສິ່ງເຫລົ່ານັ້ນ, ເພາະມັນເປັນສິ່ງທີ່ຖືກແຍກອອກເພື່ອການທຳລາຍ.


generated on Tue Jun 17 19:01:42 2025

# 8

[1]ພວກທ່ານຕ້ອງຖືຮັກສາພະບັນຍັດທັງຫລາຍທີ່ຂ້ານ້ອຍກຳລັງມອບໃຫ້ພວກທ່ານໃນວັນນີ້, ເພື່ອວ່າພວກທ່ານຈະມີຊີວິດ ແລະ ທະວີຂຶ້ນ, ແລະ
ເຂົ້າໄປເພື່ອຢຶດຄອງດິນແດນທີ່ພຣະຢາເວໄດ້ຊົງສັນຍາຕໍ່ບັນພະບູລຸດຂອງພວກທ່ານ.
[2]ພວກທ່ານຈະລະນຶກເຖິງວິທີທຸກຢ່າງທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງນຳພວກທ່ານຊ່ວງສີ່ສິບປີໃນຖິ່ນທຸລະກັນດານນັ້ນ,
ເພື່ອວ່າພຣະອົງຈະຊົງໃຫ້ພວກທ່ານຖ່ອມໃຈລົງ, ເພື່ອພຣະອົງຈະຊົງທົດສອບພວກທ່ານໃຫ້ຮູ້ເຖິງສິ່ງທີ່ຢູ່ໃນໃຈພວກທ່ານ,
ວ່າພວກທ່ານຈະຖືຮັກສາພະບັນຍັດທັງຫລາຍຂອງພຣະອົງຫລືບໍ່.

[3]ພຣະອົງຈະເຮັດໃຫ້ພວກທ່ານຖ່ອມໃຈລົງ, ແລະ ເຮັດໃຫ້ພວກທ່ານຫິວ, ເລະ ຊົງລ້ຽງດູພວກທ່ານດ້ວຍມານາ,
ຄືສິ່ງທີ່ພວກທ່ານບໍ່ຮູ້ແລະລວມທັງບັນພະບູລຸດຂອງພວກທ່ານກໍບໍ່ຮູ້.
ພຣະອົງຊົງເຮັດແບບນັ້ນເພື່ອໃຫ້ທຸກຄົນຮູ້ວ່າບໍ່ແມ່ນພຽງແຕ່ເຂົ້າຈີ່ເທົ່ານັ້ນທີ່ເຮັດໃຫ້ປະຊາຊົນມີຊີວິດຢູ່;
ແຕ່ໂດຍທຸກສິ່ງທີ່ອອກມາຈາກພຣະຢາເວທີ່ເຮັດໃຫ້ປະຊາຊົນມີຊີວິດຢູ່.
[4]ເສື້ອຜ້າຂອງພວກທ່ານກໍບໍ່ເກົ່າ ຫລື ຂາດ, ແລະ ຕີນຂອງທ່ານກໍບໍ່ບວມໃນຊ່ວງລະຫວ່າງສີ່ສິບປີເຫລົ່ານັ້ນ.
[5]ພວກທ່ານຈະຄິດເຖິງສິ່ງທີ່ຢູ່ໃນຫົວໃຈຂອງພວກທ່ານ, ຄືກັບຜູ້ຊາຍຄົນຫນຶ່ງທີ່ອົບຮົມສັ່ງສອນລູກຊາຍຂອງຕົນ,
ດັ່ງນັ້ນພຣະຢາເວພຣະເຈົ້າຂອງພວກທ່ານກໍອົບຮົມສັ່ງສອນພວກທ່ານ.[6]ພວກທ່ານຈະຖືຮັກສາພະບັນຍັດຕ່າງໆ
ຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອວ່າພວກທ່ານຈະເດີນໃນທາງຂອງພຣະອົງ ແລະ ຖວາຍກຽດແດ່ພຣະອົງ.
[7]ພຣະຢາເວພຣະເຈົ້າຂອງທ່ານກຳລັງນຳທ່ານເຂົ້າໄປໃນດິນເດນອັນປະເສີດ, ດິນແດນທີ່ມີນ້ຳພຸ ແລະ ແມ່ນ້ຳໄຫລອອກມາໄປຍັງພູເຂົາຕ່າງໆ,
ແລະທ່າມກາງເນີນເຂົາຕ່າງໆ;[8]ດິນແດນທີ່ເຕັມໄປດ້ວຍເຂົ້າສາລີ ແລະ ເຂົ້າບະເລ, ຕົ້ນອະງຸ່ນ, ຕົ້ນຫມາກເດື່ອຍ, ແລະ ຕົ້ນຫມາກພິລາ;
ດິນແດນທີ່ເຕັມໄປດ້ວຍຕົ້ນຫມາກກອກ ແລະ ນ້ຳເຜີ້ງ.
[9]ຄືດິນແດນທີ່ພວກທ່ານຈະໄດ້ກິນເຂົ້າຈີ່ໄດ້ຢ່າງບໍ່ຂາດ, ແລະ ເປັນທີ່ພວກທ່ານບໍ່ໄດ້ໄປໂດຍບໍ່ມີຫຍັງ; ດິນແດນທີ່ມີຫີນຕ່າງໆທີ່ເຮັດຈາກເຫລັກ
ແລະ ພວກທ່ານຈະຂຸດທອງແດງໄດ້ຕາມເນີນເຂົາຕ່າງໆ.[10]ພວກທ່ານຈະໄດ້ກິນຢ່າງອີ່ມຫນຳສຳລານ, ແລະ
ພວກທ່ານຈະສັນລະເສີນພຣະຢາເວພຣະເຈົ້າຂອງພວກທ່ານສຳລັບດິນແດນອັນປະເສີດທີ່ພຣະອົງໄດ້ປຣະທານໃຫ້ແກ່ພວກທ່ານ.
[11]ຈົ່ງເອົາໃຈໃສ່ເພື່ອວ່າທ່ານຈະບໍ່ຫລົງລືມພຣະຢາເວພຣະເຈົ້າຂອງພວກທ່ານ, ແລະ ເພື່ອພວກທ່ານຈະບໍ່ເສີຍຕໍ່ຄຳສັ່ງຂອງພຣະອົງ,
ພະບັນຍັດຂອງພຣະອົງ, ແລະ ກົດຫມາຍຂອງພຣະອົງ ທີ່ຂ້ານ້ອຍໄດ້ສັ່ງພວກທ່ານໃນວັນນີ້,[12]ບໍ່ເຊັ່ນນັ້ນ, ເມື່ອພວກທ່ານກິນເຂົ້າອີ່ມແລ້ວ, ແລະ
ເມື່ອພວກທ່ານສ້າງບ້ານທີ່ດີ ແລະ ອາໄສຢູ່ນັ້ນຈະເຮັດໃຫ້ພວກທ່ານຫລົງໄຫລ.
[13]ຈົ່ງລະວັງໃຫ້ດີເມື່ອຝູງສັດທັງຫລາຍຂອງພວກທ່ານມີຫລາຍຂຶ້ນ ແລະ ເມື່ອເງິນແລະທອງຄຳຂອງພວກທ່ານເພີ່ມຫລາຍຂຶ້ນ, ແລະ
ທຸກສິ່ງທີ່ມີນັ້ນເພີ່ມຫລາຍຂຶ້ນ,[14]ແລ້ວຈິດໃຈຂອງທ່ານຈະມົວເມົານຳສິ່ງເຫລົ່ານັ້ນ ແລະ
ຈະເຮັດໃຫ້ພວກທ່ານລືມພຣະຢາເວພຣະເຈົ້າຂອງພວກທ່ານ, ຜູ້ຊົງນຳພວກທ່ານອອກມາຈາກດິນແດນເອຢິບ, ອອກມາຈາກເຮືອນທາດນັ້ນ.
[15]ຢ່າຫລົງລືມພຣະອົງຜູ້ຊົງນຳພວກທ່ານອອກມາຈາກຖິ່ນທຸລະກັນດານອັນກວ້າງໃຫຍ່, ແລະ ຫນ້າຢ້ານທີ່ມີສັດມີພິດຮ້າຍແຮງ ແລະ
ແມງງອດທັງຫລາຍ ແລະ ພື້ນແຜ່ນດິນທີ່ແຫ້ງແລ້ງບໍ່ມີນ້ຳຜູ້ໄດ້ຊົງເຮັດໃຫ້ນ້ຳໄຫລອອກມາຈາກຫີນເຫລັກໄຟນັ້ນ.
[16]ພຣະອົງໄດ້ຊົງລ້ຽງດູພວກທ່ານໃນຖິ່ນທຸລະກັນດານດ້ວຍມານາທີ່ບັນພະບູລຸດຂອງທ່ານທັງຫລາຍບໍ່ເຄີຍຮູ້ຈັກ,
ເພື່ອວ່າພຣະອົງຈະເຮັດໃຫ້ພວກທ່ານຖ່ອມໃຈ ແລະທົດສອບພວກທ່ານ ເພື່ອເຮັດໃຫ້ພວກທ່ານດີໃນບັ້ນປາຍ,
[17]ແຕ່ພວກທ່ານອາດກ່າວໃນໃຈຂອງພວກທ່ານວ່າ, 'ອຳນາດຂອງເຮົາ ແລະ ກຳລັງແຫ່ງມືຂອງເຮົາເຮັດໃຫ້ໄດ້ຄວາມມັ່ງຄັ່ງທັງຫມົດນີ້.'
[18]ແຕ່ພວກທ່ານຈະລະນຶກເຖິງພຣະຢາເວພຣະເຈົ້າຂອງພວກທ່ານ, ເພາະພຣະອົງໄດ້ເປັນຜູ້ປະທານອຳນາດແກ່ພວກທ່ານ;
ເພື່ອວ່າພວກທ່ານຈະຫມັ້ນຄົງ ເພື່ອພຣະອົງຈະຊົງສະຖາປະນາພັນທະສັນຍາທີ່ພຣະອົງໄດ້ຊົງສັນຍາຕໍ່ບັນພະບູລຸດຂອງພວກທ່ານ,
ດັ່ງທີ່ເປັນຢູ່ໃນທຸກວັນນີ້.[19]ສິ່ງນັ້ນຈະເກີດຂຶ້ນ ຖ້າຫາກທ່ານລືມພຣະຢາເວພຣະເຈົ້າຂອງພວກທ່ານ ແລະ ເດີນຕາມພະອື່ນໆ
ນະມັດສະການພະເຫລົ່ານັ້ນ, ແລະ
ບູຊາພະເຫລົ່ານັ້ນຂ້ານ້ອຍຂໍເປັນພະຍານຕໍ່ຕ້ານພວກທ່ານໄວ້ໃນວັນນີ້ວ່າພວກທ່ານຈະໄດ້ຮັບການລົງໂທດຢ່າງແນ່ນອນ.
[20]ຄືກັບຊົນຊາດທັງຫລາຍທີ່ພຣະຢາເວຊົງລົງໂທດຕໍ່ຫນ້າຕໍ່ຕາຂອງພວກທ່ານ, ດັ່ງນັ້ນຈະລົງໂທດພວກທ່ານ
ເພາະພວກທ່ານບໍ່ເຊື່ອຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ.

 generated on Tue Jun 17 19:01:42 2025

# 9

[1]ຈົ່ງຟັງເຖີດ, ອິດສະຣາເອນເອີຍ; ພວກທ່ານກຳລັງຈະຂ້າມແມ່ນ້ຳຈໍແດນໃນມື້ນີ້, ເພື່ອເຂົ້າໄປຂັບໄລ່ຊົນຊາດຕ່າງໆທີ່ຍິ່ງໃຫຍ່ກວ່າ
ແລະເຂັ້ມແຂງກວ່າພວກທ່ານ, ແລະ ຍຶດເມືອງທັງຫລາຍທີ່ຍິ່ງໃຫຍ່ ແລະ ມີປ້ອມສູງເຖິງທ້ອງຟ້າ,[2]ຜູ້ຄົນທີ່ໂຕໃຫຍ່ ແລະ
ສູງບັນພະບູລຸດຊາຍທັງຫລາຍຂອງຄົນອານາດ, ຜູ້ທີ່ພວກທ່ານຮູ້ຈັກ, ແລະ ຜູ້ທີ່ພວກທ່ານໄດ້ຍິນປະຊາຊົນເວົ້າວ່າ,
'ໃຜທີ່ສາມາດຢືນຢູ່ຕໍ່ຫນ້າຂອງຄົນອານາກິມໄດ້?'

[3]ດັ່ງນັ້ນ ໃນມື້ນີ້ຈົ່ງຮູ້ເຖີດວ່າ ພຣະຢາເວຂອງພວກທ່ານຄືພຣະອົງຜູ້ຊຶ່ງໄປຂ້າງຫນ້າຂອງທ່ານຄືກັບໄຟທີ່ເຜົາຜານ;
ພຣະອົງຈະຊົງທຳລາຍພວກເຂົາ, ແລະ ພຣະອົງຈະຊົງປາບພວກເຂົາຕໍ່ຫນ້າພວກທ່ານ; ເພື່ອພວກທ່ານຈະຂັບໄລ່ເຂົາອອກໄປ ແລະ
ເຮັດໃຫ້ພວກເຂົາພິນາດໄປຢ່າງໄວຄືກັບພຣະຢາເວໄດ້ກ່າວແກ່ພວກທ່ານ.
[4]ຢ່າເວົ້າໃນໃຈຂອງພວກທ່ານ, ຫລັງຈາກພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຂັບໄລ່ພວກເຂົາອອກໄປຕໍ່ຫນ້າພວກທ່ານວ່າ,
'ເປັນເພາະຄວາມຊອບທຳຂອງເຮົາທີ່ພຣະຢາເວໄດ້ຊົງນຳເຮົາເຂົ້າມາຍຶດຄອງດິນແດນນີ້,' ເປັນເພາະຄວາມຊົ່ວຊ້າຂອງຊົນຊາດຕ່າງໆ
ເຫລົ່ານີ້ທີ່ພຣະຢາເວຂັບໄລ່ເຂົາອອກໄປຕໍ່ຫນ້າຕໍ່ຕາຂອງພວກທ່ານ.
[5]ບໍ່ແມ່ນຄວາມຊອບທຳຂອງທ່ານ ຫລື ຄວາມຊື່ສັດຂອງພວກທ່ານຈະເຂົ້າໄປຍຶດຄອງດິນແດນຂອງພວກເຂົານັ້ນ
ແຕ່ເປັນເພາະຄວາມຊົ່ວຊ້າຂອງຊົນຊາດຕ່າງໆເຫລົ່ານີ້ທີ່ພຣະເຈົ້າຂອງພວກທ່ານຈະຂັບໄລ່ພວກເຂົາອອກໄປຕໍ່ຫນ້າຕໍ່ຕາຂອງພວກທ່ານ, ແລະ
ເພື່ອວ່າພຣະອົງຈະເຮັດໃຫ້ຖ້ອຍຄຳຂອງພຣະອົງເປັນຈິງດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ຕໍ່ບັນພະບູລຸດຂອງພວກທ່ານ, ຄືຕໍ່ ອັບຣາຮາມ ອີຊາກ
ແລະ ຢາໂຄບ.
[6]ດັ່ງນັ້ນຈົ່ງຮູ້ເຖີດວ່າ, ພຣະຢາເວພຣະເຈົ້າຂອງທ່ານບໍ່ໄດ້ຊົງປະທານດິນແດນນີ້ໃຫ້ພວກທ່ານຍຶດຄອງເພາະຄວາມຊອບທຳຂອງພວກທ່ານ,
ເພາະພວກທ່ານເປັນປະຊາຊົນທີ່ຫົວແຂງ.
[7]ຈົ່ງລະນຶກເຖິງ ແລະ ຢ່າຫລົງລືມວ່າພວກທ່ານໄດ້ເຮັດໃຫ້ພຣະຢາເວຂອງພວກທ່ານໂກດຮ້າຍໃນຖິ່ນທຸລະກັນດານມາແລ້ວຢ່າງໃດ;
ຈາກວັນນີ້ໃຫ້ທ່ານອອກຈາກເອຢິບຈົນພວກທ່ານຈະມາເຖິງສະຖານທີ່ແຫ່ງນີ້, ພວກທ່ານໄດ້ກະບົດຕໍ່ພຣະຢາເວ.
[8]ພວກທ່ານເຮັດໃຫ້ພຣະຢາເວໂກດຮ້າຍຫລາຍພໍທີ່ຈະໃຫ້ພຣະອົງທຳລາຍພວກທ່ານໄດ້.
[9]ເມື່ອຂ້ານ້ອຍຂຶ້ນໄປພູເຂົາເພື່ອຮັບແຜ່ນສີລາ, ຄືແຜ່ນສີລາແຫ່ງພັນທະສັນຍາທີ່ພຣະຢາເວໄດ້ເຮັດໄວ້ກັບພວກທ່ານ,
ຂ້ານ້ອຍໄດ້ຢູ່ເທິງພູເຂົາເປັນເວລາສີ່ສິບມື້ ແລະ ສີ່ສິບຄືນ; ຂ້ານ້ອຍບໍ່ໄດ້ກິນເຂົ້າຈີ່ຫລືກິນນ້ຳເລີຍ.
[10]ພຣະຢາເວໄດ້ປຣະທານແຜ່ນສີລາໃຫ້ພວກທ່ານສອງແຜ່ນໃຫ້ແກ່ພວກທ່ານຊຶ່ງຖືກຂຽນໂດຍມືຂອງພຣະອົງ;
ເທິງສີລາເຫລົ່ານັ້ນທຸກສິ່ງໄດ້ຖືກຈາລຶກໄວ້ຄືກັບຖ້ອຍຄຳທັງຫມົດທີ່ພຣະຢາເວໄດ້ຊົງປຣະກາດໃຫ້ແກ່ພວກທ່ານຈາກກາງໄຟທີ່ຢູ່ເທິງພູເຂົາໃນວັນທີ່ຊຸມນຸມກັນນັ້ນ.
[11]ສິ່ງນີ້ໄດ້ເກີດຂຶ້ນມື້ສຸດທ້າຍຫລັງຈາກສີ່ສິບວັນສີ່ສິບຄືນ ທີ່ພຣະຢາເວໄດ້ປະທານແຜ່ນສີລາສອງແຜ່ນນັ້ນໃຫ້ແກ່ຂ້ານ້ອຍ,
ຄືສີລາແຫ່ງພັນທະສັນຍາ.[12]ພຣະຢາເວໄດ້ກ່າວຕໍ່ຂ້ານ້ອຍວ່າ, 'ຈົ່ງລຸກຂຶ້ນ,
ຮີບລົງໄປຈາກທີ່ນີ້ເພາະປະຊາຊົນຂອງເຈົ້າຜູ້ທີ່ເຈົ້າໄດ້ນຳອອກໄປຈາກເອຢິບ, ໄດ້ເຮັດໃຫ້ຕົວຂອງພວກເຂົາເຊື່ອມເສຍແລ້ວ.
ພວກເຂົາໄດ້ປີ້ນຫນ້າອອກຈາກວິທີທີ່ເຮົາໄດ້ບັນຊາພວກເຂົາຢ່າງໄວ ພວກເຂົາໄດ້ສ້າງຮູບຫລໍ່ສຳລັບຕົວພວກເຂົາເອງແລ້ວ.'
[13]ນອກຈາກນີ້, ພຣະຢາເວໄດ້ກ່າວກັບຂ້ານ້ອຍວ່າ, 'ເຮົາໄດ້ເຫັນປະຊາຊົນນີ້; ພວກເຂົາເປັນປະຊາຊົນທີ່ຫົວແຂງ.[14]ຈົ່ງປ່ອຍເຮົາເຖີດ,
ເພື່ອເຮົາຈະທຳລາຍພວກເຂົາ ແລະ ລົບຊື່ຂອງພວກເຂົາອອກຈາກພາຍໃຕ້ຟ້າ ແລະ ເຮົາຈະເຮັດໃຫ້ເປັນຊົນຊາດທີ່ເຂັ້ມແຂງ ແລະ
ຍິ່ງໃຫຍ່ກວ່າພວກເຂົາ.'
[15]ດັ່ງນັ້ນຂ້ານ້ອຍຈຶ່ງຫັນກັບ ແລະ ລົງມາຈາກພູເຂົານັ້ນ, ແລະ ພູເຂົານັ້ນກຳລັງເຜົາຜານໄຫມ້.
ແຜ່ນສີລາແຫ່ງພັນທະສັນຍາທັງສອງແຜ່ນດິນໄດ້ຢູ່ໃນມືຂອງຂ້ານ້ອຍ.[16]ຂ້ານ້ອຍໄດ້ເບິ່ງ, ແລະ ເບິ່ງສາ,
ພວກທ່ານໄດ້ເຮັດບາບຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ. ພວກທ່ານໄດ້ຫລໍ່ຮູບງົວສຳລັບຕົວເອງ.
ພວກທ່ານໄດ້ຫັນອອກຈາກວິທີທີ່ພຣະຢາເວໄດ້ຊົງບັນຊາພວກທ່ານຢ່າງໄວ.
[17]ຂ້ານ້ອຍໄດ້ນຳແຜ່ນສີລາທັງສອງມາ ແລະ ຖິ້ມລົງຈາກມືຂ້ານ້ອຍ. ຂ້ານ້ອຍທຳລາຍແຜ່ນສີລານັ້ນຕໍ່ຫນ້າຕໍ່ຕາຂອງພວກທ່ານ.[18]ອີກເທື່ອຫນຶ່ງ
ຂ້ານ້ອຍໄດ້ກົ້ມຫນ້າລົງຕໍ່ພຣະຢາເວເປັນເວລາສີ່ສິບວັນສີ່ສິບຄືນ; ຂ້ານ້ອຍບໍ່ໄດ້ກິນເຂົ້າຈີ່ ຫລື ກິນນ້ຳເລີຍ,
ເພາະຄວາມບາບທັງຫມົດຂອງພວກທ່ານທີ່ພວກທ່ານໄດ້ເຮັດ ໃນການເຮັດເຊັ່ນນັ້ນເປັນສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ,
ຊຶ່ງເປັນການເຮັດໃຫ້ພຣະອົງໂກດຮ້າຍ.
[19]ເພາະຂ້ານ້ອຍຢ້ານຄວາມໂກດຮ້າຍ ແລະຄວາມບໍ່ພໍພຣະໃຈຂອງພຣະຢາເວ ຊຶ່ງໄດ້ໂກດຮ້າຍຫລາຍຕໍ່ສູ້ພວກທ່ານເພື່ອທຳລາຍພວກທ່ານ.
ແຕ່ພຣະຢາເວໄດ້ຟັງຂ້ານ້ອຍໃນເວລານັ້ນດ້ວຍ.[20]ພຣະຢາເວຊົງມີຄວາມໂກດຮ້າຍຫລາຍຕໍ່ອາໂຣນ ຈົນເຖິງກັບຈະທຳລາຍເຂົາ;
ຂ້ານ້ອຍໄດ້ອະທິຖານເພື່ອອາໂຣນໃນເວລານັ້ນເຊັ່ນກັນ.
[21]ຂ້ານ້ອຍໄດ້ນຳຄວາມບາບຂອງພວກທ່ານ, ຮູບຫລໍ່ລູກງົວທີ່ພວກທ່ານໄດ້ສ້າງຂຶ້ນມາ, ແລະເຜົາມັນທຸບມັນຈົນມຸ່ນ, ແລະ ບົດຈົນເປັນຝຸ່ນ
ຈົນເປັນຄືກັບຂີ້ຝຸ່ນ. ຂ້ານ້ອຍເທມັນລົງແມ່ນ້ຳທີ່ໄຫລລົງມາຈາກພູເຂົາ.
[22]ທີ່ຕາເບຣາ, ມັດສາ, ແລະ ກິບໂຣດ ຮັດຕາອາວາ, ພວກເຈົ້າກໍເຮັດໃຫ້ພຣະຢາເວໂກດຮ້າຍ.
[23]ເມື່ອພຣະຢາເວໄດ້ສົ່ງພວກທ່ານອອກຈາກກາເດັດບານເນອາ ແລະ ກ່າວວ່າ, 'ຈົ່ງຂຶ້ນໄປ ແລະ
ຍຶດຄອງດິນແດນທີ່ເຮົາໄດ້ປະທານໃຫ້ແກ່ພວກເຈົ້າ,' ແລ້ວພວກທ່ານກໍໄດ້ກະບົດຕໍ່ພຣະບັນຍັດຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
[24]ພວກທ່ານບໍ່ໄດ້ເຊື່ອຫລື ຟັງສຽງຂອງພະອົງ ພວກທ່ານໄດ້ກະບົດຕໍ່ພຣະຢາເວນັບຈາກວັນນັ້ນທີ່ຂ້ານ້ອຍໄດ້ຮູ້ຈັກພວກທ່ານ.
[25]ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ກົ້ມຫນ້າລົງຕໍ່ພຣະຢາເວໃນຊ່ວງສີ່ສິບວັນສີ່ສິບຄືນເຫລົ່ານັ້ນ,
ເພາະພຣະອົງໄດ້ກ່າວວ່າພຣະອົງຈະຊົງທຳລາຍພວກທ່ານ.[26]ຂ້ານ້ອຍໄດ້ອະທິຖານເຖິງພຣະຢາເວ ວ່າ, 'ໂອ ຂ້າແຕ່ອົງພຣະຜູ້ເປັນເຈົ້າ
ພຣະຢາເວ, ຂໍຊົງຢ່າໄດ້ທຳລາຍປະຊາຊົນຂອງພຣະອົງຫລື ມໍລະດົກຂອງພຣະອົງໄດ້ໄຖ່ໂດຍຄວາມຍິ່ງໃຫຍ່ຂອງພຣະອົງ,
ທີ່ພຣະອົງໄດ້ຊົງນຳອອກມາຈາກເອຢິບດ້ວຍມືອັນຊົງຣິດ.

[27]ຂໍຊົງລະນຶກເຖິງບັນດາຜູ້ຮັບໃຊ້ຂອງພຣະອົງ ອັບຣາຮາມ, ອີຊາກ, ແລະ ຢາໂຄບ; ຢ່າສົນໃຈໃນຄວາມດື້ດຶງຂອງປະຊາຊົນເຫລົ່ານັ້ນ ຫລື
ທີ່ຄວາມບາບຂອງພວກເຂົາ, [28]ເພື່ອວ່າດິນແດນຈາກທີ່ຂ້ານ້ອຍໄດ້ນຳພວກເຂົາມານັ້ນຈະກ່າວໄດ້ວ່າ, "ເພາະພຣະຢາເວບໍ່ສາມາດນຳພວກເຂົາ
ເຂົ້າໄປໃນດິນແດນທີ່ພຣະອົງຊົງສັນຍາໄວ້ຕໍ່ພວກເຂົາ, ພຣະອົງຈຶ່ງໄດ້ນຳພວກເຂົາອອກມາ,
ເພື່ອປະຫານພວກເຂົາໃນຖິ່ນທຸລະກັນດານ." [29]ແຕ່ພວກເຂົາຍັງເປັນປະຊາຊົນຂອງພຣະອົງ ແລະ ເປັນມໍລະດົກຂອງພຣະອົງ
ຜູ້ທີ່ພຣະອົງໄດ້ຊົງນຳອອກມາໂດຍພຣະກຳລັງອັນເຂັ້ມແຂງ ແລະໂດຍການສຳແດງຣິດອຳນາດຂອງພຣະອົງນັ້ນ.'


generated on Tue Jun 17 19:01:42 2025

10 1ໃນເວລານັ້ນ ພຣະຢາເວໄດ້ກ່າວກັບຂ້ານ້ອຍວ່າ, 'ຈົ່ງຕັດສີລາສອງແຜ່ນຄືກັບຄັ້ງທຳອິດ ແລະ ຈົ່ງລຸກຂຶ້ນມາຫາເຮົາເທິງພູເຂົາ, ແລະ
ຈົ່ງເຮັດຫີບໄມ້ຫນຶ່ງຫີບ. 2ເຮົາຈະຂຽນຖ້ອຍຄຳຕ່າງໆ
ເທິງສີລາເຊັ່ນດຽວກັນກັບໄດ້ຂຽນເທິງສີລາສອງແຜ່ນທຳອິດທີ່ເຈົ້າໄດ້ທຳລາຍໄປແລ້ວ, ແລະເຈົ້າຈົ່ງນຳສີລາທັງສອງແຜ່ນໃສ່ໄວ້ໃນຫີບນັ້ນ.'

3ດັ່ງນັ້ນຂ້ານ້ອຍຈຶ່ງໄດ້ເຮັດຫີບຈາກໄມ້ກະຖິນເທດຂຶ້ນມາຫີບຫນຶ່ງ, ແລະ ຂ້ານ້ອຍໄດ້ສະກັດສີລາສອງແຜ່ນຄືກັບເທື່ອທຳອິດ, ແລະ
ຂ້ານ້ອຍໄດ້ຂຶ້ນໄປພູເຂົາໂດຍມີສີລາສອງແຜ່ນຢູ່ໃນມືຂອງຂ້ານ້ອຍ. 4ພຣະອົງໄດ້ຊົງຂຽນເທິງສີລາເຫລົ່ານັ້ນ,
ຄືກັບທີ່ໄດ້ຂຽນໃນເທື່ອທຳອິດຄືພຣະສັນຍາສິບປະການ
ທີ່ພຣະຢາເວໄດ້ກ່າວແກ່ຂ້ານ້ອຍອອກມາຈາກກາງໄຟທີ່ເທິງພູເຂົາໃນວັນແຫ່ງການຊຸມນຸມກັນນັ້ນ;
ແລ້ວພຣະຢາເວຈຶ່ງໄດ້ປະທານສີລາເຫລົ່ານັ້ນໃຫ້ຂ້ານ້ອຍ.
5ຂ້ານ້ອຍໄດ້ຫັນກັບ ແລະ ລົງມາຈາກພູເຂົາ, ແລະ ນຳແຜ່ນສີລາທັງສອງແຜ່ນໃສ່ຫີບທີ່ຂ້ານ້ອຍໄດ້ເຮັດຂຶ້ນມາ; ສີລາທັງສອງແຜ່ນກໍຢູ່ທີ່ນັ້ນ,
ຕາມທີ່ພຣະຢາເວໄດ້ຊົງບັນຊາຂ້ານ້ອຍ."
6ປະຊາຊົນອິດສະຣາເອນໄດ້ເດີນທາງຈາກນ້ຳສ້າງທີ່ເປັນຂອງຢາອາການ ແລະ ໄດ້ໄປທີ່ໂມເສຣາ. ອາໂຣນໄດ້ເສຍຊີວິດຢູ່ທີ່ນັ້ນ, ແລະ
ເຂົາໄດ້ຝັງທີ່ນັ້ນ; ເອເລອາຊາ, ລູກຊາຍຂອງເພິ່ນໄດ້ຂຶ້ນເປັນປະໂຣຫິດແທນ. 7ຈາກນັ້ນພວກເຂົາໄດ້ເດີນທາງໄປທີ່ກຸດໂກດາ, ແລະ
ກຸດໂກດາໄປຍັງໂຢດບາທາ, ຄືບ່ອນທີ່ມີນ້ຳຫລາຍ.
8ໃນເວລານັ້ນ ພຣະຢາເວໄດ້ຊົງເລືອກເຜົ່າເລວີໃຫ້ເປັນຜູ້ແບກຫີບພັນທະສັນຍາຂອງພຣະຢາເວ, ເພື່ອຢືນຢູ່ຕໍ່ຫນ້າຂອງພຣະຢາເວ
ເພື່ອປະຕິບັດພຣະອົງ, ແລະ ເພື່ອອວຍພອນປະຊາຊົນໃນພຣະນາມຂອງພຣະອົງ, ຄືແບບທຸກມື້ນີ້.
9ດ້ວຍເຫດນີ້ຄົນເລວີຈຶ່ງມີສິນບັດໃນດິນແດນນັ້ນຮ່ວມກັບພວກພີ່ນ້ອງຂອງພວກເຂົາ, ພຣະຢາເວຊົງເປັນມໍລະດົກຂອງເຂົາ,
ຄືດັ່ງພຣະຢາເວພຣະເຈົ້າຂອງພວກທ່ານໄດ້ກ່າວແກ່ເຂົາ.)
10"ຂ້ານ້ອຍໄດ້ຢູ່ເທິງພູເຂົາ, ໃນເວລາສີ່ສິບວັນສີ່ສິບຄືນຄືຄັ້ງທຳອິດ. ພຣະຢາເວໄດ້ຊົງຟັງຂ້ານ້ອຍໃນເວລານັ້ນເຊັ່ນກັນ;
ພຣະຢາເວບໍ່ໄດ້ຈະທຳລາຍພວກທ່ານ. 11ພຣະຢາເວໄດ້ກ່າວແກ່ຂ້ານ້ອຍວ່າ, 'ຈົ່ງລຸກຂຶ້ນ, ນຳຫນ້າປະຊາຊົນ
ນຳພວກເຂົາໄປໃນການເດີນທາງຂອງພວກເຂົາ ພວກເຂົາຈະເຂົ້າໄປ; ແລະ
ຢຶດຄອງດິນແດນທີ່ເຮົາໄດ້ສັນຍາເອົາໄວ້ກັບບັນດາບັນພະບູລຸດຂອງພວກເຂົາເພື່ອປະທານໃຫ້ແກ່ພວກເຂົາ.'
12ບັດນີ້, ອິດສະຣາເອນເອີຍ, ພຣະຢາເວພຣະເຈົ້າຂອງພວກທ່ານ, ບໍ່ໄດ້ຊົງຕ້ອງການສິ່ງໃດຈາກພວກທ່ານ,
ນອກຈາກຄວາມຢຳເກງພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອດຳເນີນວິຖີທັງຫມົດຂອງພຣະອົງເພື່ອຮັກພຣະອົງ, ແລະ
ເພື່ອນະມັດສະການພຣະເຈົ້າຂອງພວກເຮົາດ້ວຍສິ້ນສຸດໃຈຂອງພວກທ່ານ, ແລະດ້ວຍສິ້ນສຸດຈິດຂອງພວກທ່ານ,
13ເພື່ອຮັກສາຄຳສັ່ງຂອງພຣະຢາເວ, ແລະ ກົດບັນຍັດຂອງພຣະອົງ
ທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້ເພື່ອຜົນດີຂອງພວກທ່ານເອງບໍ່ແມ່ນບໍ?
14ເບິ່ງສາ, ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານຜູ້ຊົງເປັນເຈົ້າຂອງທ້ອງຟ້າ ແລະສະຫວັນສູງສຸດ, ແຜ່ນດິນໂລກ,
ພ້ອມທຸກສິ່ງທີ່ຢູ່ໃນສິ່ງເຫລົ່ານີ້. 15ພຽງແຕ່ພຣະຢາເວໄດ້ພໍໃຈບັນດາບັນພະບູລຸດຂອງພວກທ່ານ ແລະຊົງຮັກພວກເຂົາ, ແລະ
ພຣະອົງຊົງເລືອກພວກທ່ານຄືເຊື້ອສາຍຂອງພວກເຂົາ, ສືບທອດຈາກພວກເຂົາ ຫລາຍ, ຍິ່ງກວ່າປະຊາຊົນອື່ນໃດ,
ດັ່ງທີ່ພຣະອົງຊົງເຮັດໃນວັນນີ້.
16ດ້ວຍເຫດນີ້ ຈົ່ງເຂົ້າໃນຫົວໃຈຂອງພວກທ່ານ, ແລະ ຢ່າຫົວແຂງອີກຕໍ່ໄປ. 17ເພາະພຣະຢາເວຂອງພວກທ່ານ,
ພຣະອົງຊົງເປັນພຣະເຈົ້າເຫນືອພະໃດໆ, ແລະ ຊົງເປັນອົງພຣະຜູ້ເປັນເຈົ້າເຫນືອເຈົ້ານາຍໃດໆ, ຊົງເປັນພຣະເຈົ້າຜູ້ຍິ່ງໃຫຍ່, ຜູ້ຊົງສະຖິດ,
ແລະ ຫນ້າຢຳເກງ, ຜູ້ຊື່ງບໍ່ເຫັນແກ່ຜູ້ໃດ ແລະ ບໍ່ໄດ້ຮັບສິນຈ້າງ.
18ພຣະອົງຊົງດຳເນີນຢ່າງຍຸດຕິທຳເພື່ອຜູ້ກຳພ້າພໍ່ແມ່, ແລະ ແມ່ຫມ້າຍ, ແລະ
ພຣະອົງຊົງສຳແດງຄວາມຮັກຕໍ່ຄົນຕ່າງຊາດໂດຍການປະທານອາຫານ ແລະ ເສື້ອຜ້າໃຫ້ແກ່ເຂົາ. 19ດ້ວຍເຫດນີ້ ຈົ່ງຮັກຄົນຕ່າງຊາດ;
ເພາະພວກທ່ານເປັນຄົນຕ່າງຊາດໃນດິນແດນເອຢິບ.
20ພວກທ່ານຈະຢຳເກງພຣະຢາເວພຣະເຈົ້າຂອງພວກທ່ານ; ຈະນະມັດສະການພຣະອົງທ່ານຕ້ອງຜູກພັນຢູ່ກັບພຣະອົງ, ແລະ
ສາບານໂດຍພຣະນາມຂອງພຣະອົງ. 21ພຣະອົງຄືຄຳສັນລະເສີນຂອງພວກທ່ານ, ແລະ ພຣະອົງຄືພຣະເຈົ້າຂອງພວກທ່ານ,
ຜູ້ໄດ້ເຮັດສິ່ງທີ່ຍິ່ງໃຫຍ່ແລະ ສິ່ງທີ່ອັດສະຈັນເຫລົ່ານີ້ໃຫ້ກັບພວກທ່ານ, ຕາມທີ່ດວງຕາຂອງພວກທ່ານໄດ້ແນມເຫັນນັ້ນ.
22ບັນດາບັນພະບູລຸດຂອງພວກທ່ານໄດ້ລົງໄປທີ່ເອຢິບພຽງເຈັດສິບຄົນ;
ບັດນີ້ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ເຮັດໃຫ້ພວກທ່ານມີຈຳນວນຫລາຍກວ່າດວງດາວໃນທ້ອງຟ້າ.

 generated on Tue Jun 17 19:01:42 2025

11 [1]ດ້ວຍເຫດນີ້ພວກທ່ານຈະຮັກສາພຣະຢາເວພຣະເຈົ້າຂອງພວກທ່ານແລະຮັກສາຄຳສັ່ງສອນຂອງພຣະອົງ
ກົດບັນຍັດຂອງພຣະອົງກົດຫມາຍຂອງພຣະອົງ ແລະພຣະບັນຊາຂອງພຣະອົງ

[2]ຈົ່ງສັງເກດເຖີດວ່າຂ້ານ້ອຍບໍ່ໄດ້ກ່າວກັບລູກຫລານຂອງພວກທ່ານ, ຜູ້ບໍ່ເຄີຍຮູ້ຈັກຫລືບໍ່ເຄີຍເຫັນການລົງໂທດຂອງພຣະຢາເວ,
ບໍ່ເຄີຍເຫັນຄວາມຍິ່ງໃຫຍ່ຂອງພຣະອົງ, ພຣະຫັດອັນຊົງຣິດຂອງພຣະອົງ, ຫລືແຂນທີ່ຢຽດອອກຂອງພຣະອົງ,
[3]ຫມາຍສຳຄັນແລະການກະທຳຕ່າງໆ ທີ່ພຣະອົງໄດ້ຊົງເຮັດໃນທ່າມກາງເອຢິບຕໍ່ຟາໂຣ, ກະສັດຂອງເອຢິບ, ແລະຕໍ່ດິນແດນທັງຫມົດຂອງເຂົາ.
[4]ພວກເຂົາບໍ່ເຄີຍເຫັນສິ່ງທີ່ພຣະອົງໄດ້ຊົງເຮັດຕໍ່ກອງທັບຂອງເອຢິບ, ຕໍ່ກອງທະຫານມ້າຂອງພວກເຂົາ, ຕໍ່ບັນດາລົດມ້າຂອງພວກເຂົາ,
ທີ່ພຣະອົງຊົງເຮັດໃຫ້ນ້ຳທະເລແດງຖ້ວມຈົມພວກເຂົາໃນຂະນະທີ່ໄລ່ຕິດຕາມພວກທ່ານ,
ແລະການທີ່ພຣະຢາເວໄດ້ຊົງທຳລາຍພວກເຂົາຈົນເຖິງທຸກວັນນີ້[5]ຫລືສິ່ງທີ່ພຣະອົງໄດ້ຊົງກະທຳເພື່ອພວກທ່ານໃນຖິ່ນທຸລະກັນດານຈົນກະທັ້ງພວກທ່ານໄດ້ມາເຖິງສະ
[6]ພວກເຂົາບໍ່ເຄີຍເຫັນສິ່ງທີ່ພຣະຢາເວໄດ້ຊົງເຮັດຕໍ່ດາທານແລະອາບີຣາມ, ລູກຊາຍຂອງເອລີອາບ,
ເຜົ່າຣູເບັນການທີ່ແຜ່ນດິນໂລກອ້າປາກຂອງມັນ ແລະກືນພວກເຂົາລົງໄປ, ຄົວເຮືອນຂອງພວກເຂົາ, ເຕັນຂອງພວກເຂົາ,
ແລະທຸກສິ່ງທີ່ມີຊີວິດຕິດຕາມພວກເຂົາໃນທ່າມກາງອິດສະຣາເອນທັງຫມົດ.
[7]ແຕ່ດວງຕາຂອງພວກທ່ານໄດ້ເຫັນພາລະກິດອັນຍິ່ງໃຫຍ່ທັງຫມົດຂອງພຣະອົງທີ່ໄດ້ຊົງເຮັດ.
[8]ດ້ວຍເຫດນີ້ຈົ່ງຖືຮັກສາພຣະບັນຊາທັງຫລາຍທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້, ເພື່ອພວກທ່ານຈະເຂັ້ມແຂງ,
ແລະເຂົ້າໄປຍຶດຄອງດິນແດນທີ່ພວກທ່ານກຳລັງຈະຂ້າມໄປຍຶດຄອງນັ້ນ,
[9]ແລະພວກທ່ານຈະເຮັດໃຫ້ວັນເວລາຂອງພວກທ່ານຍືນຍາວຕາມທີ່ພຣະຢາເວໄດ້ຊົງສັນຍາໄວ້ກັບບັນດາບັນພະບູລຸດຂອງພວກທ່ານວ່າຈະປະທານໃຫ້ແກ່ພວກເຂົ
ຄືດິນແດນທີ່ໄຫລລົ້ນດ້ວຍນ້ຳນົມແລະນ້ຳເຜິ້ງ.
[10]ເພາະດິນແດນນັ້ນ, ທີ່ພວກທ່ານຈະເຂົ້າໄປຍຶດຄອງນັ້ນ, ບໍ່ຄືກັບດິນແດນຂອງເອຢິບທີ່ພວກທ່ານໄດ້ມາ,
ແມ່ນພວກທ່ານໄດ້ມາຈາກການວ່ານເມັດເຂົ້າຂອງພວກທ່ານ,
ແລະຫົດນ້ຳດ້ວຍຕີນຂອງພວກທ່ານເປັນຄືສວນພືດພັນຕ່າງໆ[11]ແຕ່ດິນແດນນັ້ນທີ່ພວກທ່ານ, ຈະຂ້າມໄປຍຶດຄອງນັ້ນ,
ເປັນດິນແດນແຫ່ງເນີນເຂົາແລະພູເຂົາຕ່າງໆ ແລະກິນນ້ຳທີ່ເປັນນ້ຳຝົນຈາກທ້ອງຟ້າ,
[12]ດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງເອົາໃຈໃສ່ສາຍຕາຂອງພຣະຢາເວພຣະເຈົ້າຂອງພວກທ່ານຊົງເຝົ້າເຫນືອແຜ່ນດິນນັ້ນສະເຫມີ
ຈາກວັນເລີ່ມຕົ້ນຂອງປີໄປຈົນເຖິງວັນສຸດທ້າຍຂອງປີ.
[13]ມັນຈະເກີດຂຶ້ນ, ຖ້າພວກທ່ານຈະຟັງດ້ວຍຄຳຫມັ້ນຕໍ່ຄຳສັ່ງຕ່າງໆ ຂອງພຣະເຈົ້າທີ່ຂ້ານ້ອຍໄດ້ບັນຊາພວກທ່ານໃນວັນນີ້,
ເພື່ອຮັກພຣະຢາເວພຣະເຈົ້າຂອງພວກທ່ານແລະເພື່ອປະຕິບັດຮັບໃຊ້ພຣະອົງດ້ວຍສຸດຈິດດ້ວຍສຸດໃຈຂອງພວກທ່ານ.
[14]ເພື່ອພຣະອົງຈະປະທານນ້ຳຝົນໃນແຜ່ນດິນຂອງພວກທ່ານຕາມລະດູການຂອງມັນ,
ຝົນຕົ້ນລະດູແລະຝົນປາຍລະດູເພື່ອພວກທ່ານຈະເກັບລວບລວມພືດຜົນຂອງພວກທ່ານ, ເຫລົ້າອະງຸ່ນໃຫມ່ຂອງພວກທ່ານ
ແລະນ້ຳມັນຂອງພວກທ່ານ.[15]ພຣະອົງຈະປະທານຫຍ້າໃນທ້ອງທົ່ງຫຍ້າຂອງພວກທ່ານສຳລັບຝູງສັດ, ແລະພວກທ່ານຈະກິນຢ່າງອີ່ມຫນຳ.
[16]ຈົ່ງເອົາໃຈໃສ່ຕົວຂອງພວກທ່ານເພື່ອວ່າຫົວໃຈຂອງພວກທ່ານຈະບໍ່ຖືກຫລອກລວງ,
ແລະເຮັດໃຫ້ພວກທ່ານຫັນອອກໄປແລະນະມັດສະການພະອື່ນ
ແລະກົ້ມກາບພະເຫລົ່ານັ້ນ[17]ເພື່ອວ່າຄວາມໂກດຮ້າຍຂອງພຣະຢາເວຈະບໍ່ພຸ່ງຂຶ້ນຕໍ່ສູ້ພວກທ່ານແລະເພື່ອວ່າພຣະອົງຈະບໍ່ປິດທ້ອງຟ້າໃຫ້ມີຝົນ,
ແລະແຜ່ນດິນນັ້ນຈະບໍ່ຜະລິດຜົນ, ແລະພວກທ່ານຈະຖືກທຳລາຍຢ່າງໄວວາຈາກດິນແດນອັນປະເສີດທີ່ພຣະຢາເວຊົງປະທານໃຫ້ພວກທ່ານ.
[18]ດ້ວຍເຫດນີ້ຈົ່ງຈົດຈຳຖ້ອຍຄຳເຫລົ່ານີ້ໃນໃຈຂອງພວກທ່ານແລະຈິດໃຈຂອງພວກທ່ານ, ຜູກເອົາໄວ້ເປັນຄືເຄື່ອງຫມາຍທີ່ມືຂອງພວກທ່ານ,
ແລະຄາດເອົາໄວ້ທີ່ລະຫວ່າງດວງຕາຂອງພວກທ່ານ[19]ພວກທ່ານຈະສອນບັນດາຖ້ອຍຄຳເຫລົ່ານີ້ໃຫ້ລູກຫລານຂອງພວກທ່ານ,
ແລະເວົ້າເຖິງຖ້ອຍຄຳເຫລົ່ານີ້ເພື່ອພວກທ່ານນັ່ງໃນບ້ານຂອງພວກທ່ານເມື່ອພວກທ່ານຍ່າງໄປຕາມຫົນທາງ, ເມື່ອພວກທ່ານນອນລົງ
ແລະເມື່ອທ່ານລຸກຂຶ້ນ.
[20]ພວກທ່ານຈະຂຽນຖ້ອຍຄຳເຫລົ່ານີ້ເອົາໄວ້ເທິງວົງກົບປະຕູບ້ານຂອງພວກທ່ານແລະທີ່ປະຕູເມືອງຂອງພວກທ່ານ,
[21]ເພື່ອວັນເວລາຂອງພວກທ່ານແລະວັນເວລາຂອງລູກຫລານຂອງທ່ານຈະທະວີຂຶ້ນຕາມທີ່ພຣະຢາເວໄດ້ຊົງສັນຍາໄວ້ກັບບັນດາບັນພະບູລຸດຂອງພວກທ່ານວ່າຈະປະ
[22]ເພາະຖ້າພວກທ່ານຫມັ່ນພຽນໃນການຖືຮັກສາບັນຍັດທັງຫມົດທີ່ຂ້ານ້ອຍບັນຊາພວກທ່ານຢູ່ນີ້,
ດັ່ງທີ່ພວກທ່ານກຳລັງເຮັດຕາມບັນຊາເຫລົ່ານັ້ນ, ເພື່ອຮັກສາພຣະຢາເວຂອງພວກທ່ານ, ເພື່ອດຳເນີນທາງທັງຫມົດຂອງພຣະອົງ,
ແລະເພື່ອຜູກພັນກັບພຣະອົງ,[23]ແລະພຣະຢາເວຊົງຂັບໄລ່ຊົນຊາດຕ່າງໆ ເຫລົ່ານີ້ທັງຫມົດອອກໄປຈາກພວກທ່ານ,
ແລະຈະຂັບໄລ່ຊົນຊາດຕ່າງໆທີ່ໃຫຍ່ກວ່າແລະມີກຳລັງຫລາຍກວ່າພວກທ່ານອອກໄປ.
[24]ທຸກສະຖານທີ່ ທີ່ຝາຕີນຂອງຂອງພວກທ່ານຢຽບຢ້ຳຈະເປັນຂອງພວກທ່ານຈາກຖິ່ນທຸລະກັນດານເລບານອນ ຈາກແມ່ນ້ຳ
ຄືແມ່ນ້ຳເມດີແຕຣາເນໃນທິດຕາເວັນຕົກບ່ອນໃດກໍຕາມທີ່ພວກເຈົ້າຈະຢຽບເຂົ້າໃນແຜ່ນດິນນັ້ນພຣະຢາເວພຣະເຈົ້າຂອງພວກທ່ານ[25]ຈະເຮັດໃຫ້ຄົນຢ້ານກວາພວກ
[26]ເບິ່ງ, ສາຂ້ານ້ອຍຕັ້ງພຣະພອນແລະຄຳສາບແຊ່ງຕໍ່ຫນ້າພວກທ່ານໃນວັນນີ້[27]ພຣະພອນຈະເປັນຂອງພວກທ່ານ,
ຖ້າຫາກພວກທ່ານເຊື່ອຟັງບັນຍັດຂອງພຣະຢາເວພຣະເຈົ້າຂອງພວກທ່ານທີ່ຂ້ານ້ອຍບັນຊາພວກທ່ານໃນວັນນີ້,
[28]ແລະຄຳສາບແຊ່ງຈະເປັນຂອງພວກທ່ານ, ຖ້າຫາກພວກທ່ານບໍ່ເຊື່ອຟັງບັນຍັດຂອງພຣະຢາເວພຣະເຈົ້າຂອງພວກທ່ານໃນວັນນີ້,
ເພື່ອໄປຕິດຕາມພະອື່ນໆ ທີ່ພວກທ່ານບໍ່ຮູ້ຈັກ.
[29]ສິ່ງນີ້ຈະເກີດຂຶ້ນ. ເມື່ອພຣະຢາເວຂອງພວກທ່ານພຣະເຈົ້າຂອງພວກທ່ານນຳພວກທ່ານເຂົ້າດິນແດນທີ່ພວກເຂົາເຂົ້າໄປຍຶດຄອງ,
ເພື່ອພວກທ່ານຈະໄດ້ຕັ້ງພຣະພອນເອົາໄວ້ເທິງພູເຂົາເກຣິຊິມແລະຄຳສາບແຊ່ງຈາກພູເອບານ.[30]ພວກເຂົາບໍ່ໄດ້ຂ້າມພາກແມ່ນ້ຳຈໍແດນ,
ທາງທິດຕາເວັນຕົກຂອງຫົນທາງທິດຕາເວັນຕົກໃນດິນແດນຂອງຄົນການາອານທີ່ອາໄສຢູ່ໃນອາຣາບາ,
ກົງກັນຂ້າມກິນການດ້ານຂ້າງຕົ້ນໂອກແຫ່ງໂມເຊບໍ?

31ເພາະພວກທ່ານຕ້ອງຂ້າມແມ່ນ້ຳຈໍແດນເພື່ອເຂົ້າໄປຍຶດຄອງດິນແດນທີ່ພຣະຢາເວໄດ້ຊົງກຳລັງຈະປະທານໃຫ້ແກ່ພວກທ່ານ,
ແລະພວກທ່ານຈະຍຶດຄອງດິນແດນນັ້ນ ແລະອາໄສຢູ່ໃນນັ້ນ
32ພວກທ່ານຈະຖືຮັກສາກົດບັນຍັດທັງຫລາຍແລະກົດຫມາຍຕ່າງໆ
ທີ່ຂ້ານ້ອຍໄດ້ຕັ້ງໄວ້ຕໍ່ຫນ້າພວກທ່ານໃນວັນນີ້.


generated on Tue Jun 17 19:01:42 2025

# 12

1ເຫລົ່ານີ້ຄືບັນຍັດແລະກົດຫມາຍຕ່າງໆ ທີ່ພວກທ່ານຈະໄດ້ຖືຮັກສາໄວ້ໃນດິນແດນທີ່ພຣະຢາເວ,
ພຣະເຈົ້າຂອງພວກທ່ານໄດ້ປະທານໃຫ້ແກ່ພວກທ່ານຍຶດຄອງ, ຕະຫລອດວັນເວລາທີ່ພວກທ່ານມີຊີວິດຢູ່ໂລກນີ້.
2ແນ່ນອນທີ່ພວກທ່ານຈະຕ້ອງທຳລາຍສະຖານທີ່ທຸກແຫ່ງທີ່ຊົນຊາດຕ່າງໆທີ່ພວກທ່ານໄດ້ຍຶດຄອງນັ້ນ ໄດ້ນະມັດສະການພະຕ່າງໆ
ຂອງພວກເຂົາເທິງພູເຂົາສູງຕ່າງໆ, ເທິງໂນນເຂົາທັງຫລາຍ, ແລະກ້ອງຕົ້ນໄມ້ສີຂຽວທຸກຕົ້ນ.

3ພວກທ່ານຕ້ອງທຳລາຍແທ່ນບູຊາຕ່າງໆ, ຂອງພວກເຂົາ ຈົ່ງທຸບເສົາຫີນຂອງພວກເຂົາໃຫ້ຫມຸ່ນ, ແລະເຜົາເສົາອາເຊຣາຂອງພວກເຂົາ.
ພວກທ່ານຕ້ອງລົ້ມຮູບແກະສັນຍາລັກພະຕ່າງໆ
ຂອງພວກເຂົາແລະລຶບຊື່ພະເຫລົ່ານັ້ນອອກຈາກສະຖານທີ່ນັ້ນ4ພວກທ່ານບໍ່ໄດ້ນະມັດສະການພຣະຢາເວຂອງພວກທ່ານແບບນັ້ນ.
5ແຕ່ຈົ່ງໄປຍັງສະຖານທີ່ ທີ່ພຣະຢາເວພຣະເຈົ້າຂອງທ່ານຈະເລືອກອອກມາຈາກເຜົ່າຕ່າງໆ
ທັງຫມົດຂອງພວກທ່ານເພື່ອສະຖາປານາພຣະນາມຂອງພຣະອົງ, ທີ່ນັ້ນເປັນສະຖານທີ່ ທີ່ພຣະອົງປະທັບຢູ່, ແລະເປັນສະຖານທີ່
ທີ່ພວກທ່ານຈະໄປ.6ທີ່ນັ້ນຄືສະຖານທີ່ ທີ່ພວກທ່ານຈະນຳເຄື່ອງເຜົາບູຊາຂອງພວກທ່ານມາຖວາຍ, ເຄື່ອງບູຊາຂອງພວກທ່ານ,
ແລະຂອງຖວາຍຕ່າງໆທີ່ນຳມາໂດຍມືຂອງທ່ານ, ຂອງຖວາຍແກ້ບົນຕ່າງໆ ຂອງພວກທ່ານ, ຂອງຖວາຍຕາມສະຫມັກໃຈຂອງພວກທ່ານ,
ແລະຜົນທຳອິດຂອງຝູງສັດຕ່າງໆ ຂອງພວກເຂົາ.
7ທີ່ນັ້ນພວກທ່ານຈະກິນອາຫານຊ້ອງຫນ້າພຣະຢາເວພຣະເຈົ້າຂອງພວກທ່ານແລະຊົມຊື່ນຍິນດີກັບທຸກສິ່ງທີ່ພວກທ່ານໄດ້ລົງມືເຮັດ,
ພວກທ່ານແລະຄົວເຮືອນຂອງພວກທ່ານ, ຄືສະຖານທີ່ ທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງອວຍພອນພວກທ່ານ.
8ພວກທ່ານຈະບໍ່ເຮັດສິ່ງຕ່າງໆ ທັງຫມົດທີ່ພວກເຮົາກຳລັງເຮັດໃນວັນນີ້; ບັດນີ້ທຸກຄົນກຳລັງເຮັດໃນສິ່ງທີ່ຖືກຕ້ອງໃນສາຍຕາຂອງຕົນເອງ;
9ເພາະພວກທ່ານຍັງບໍ່ໄດ້ມາເຖິງການພັກສະຫງົບ, ມາເຖິງມໍລະດົກທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງປະທານໃຫ້ແກ່ພວກທ່ານ.
10ແຕ່ເມື່ອພວກທ່ານຂ້ວາມແມ່ນ້ຳຈໍແດນແລະອາໄສຢູ່ໃນດິນແດນັ້ນ
ທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງເຮັດໃຫ້ພວກທ່ານໄດ້ເປັນມໍລະດົກ,
ແລະເມື່ອພຣະອົງປະທານໃຫ້ພວກທ່ານພັກສະງົບຈາກບັນດາສັດຕຣູທັງຫມົດທີ່ຢູ່ອ້ອມຮອບ, ເພື່ອພວກທ່ານຈະມີຊີວິດຢູ່ຢ່າງປອດໄພ,
11ແລ້ວສິ່ງນີ້ຈະເກີດຂຶ້ນເພື່ອໃນສະຖານທີ່ພຣະຢາເວພຣະເຈົ້າຂອງພວກທ່ານຈະເລືອກເພື່ອເຮັດໃຫ້ພຣະນາມຂອງພຣະອົງຢູ່ທີ່ນັ້ນ,
ກັບພວກທ່ານຈະນຳທຸກສິ່ງທີ່ຂ້ານ້ອຍບັນຊາພວກທ່ານ ຄື: ເຄື່ອງເຜົາບູຊາຂອງພວກທ່ານ, ເຄື່ອງບູຊາຂອງພວກທ່ານ,
ແລະເຄື່ອງຖວາຍທີ່ນຳມາໂດຍມືຂອງພວກທ່ານ, ແລະທຸກສິ່ງທີ່ເປັນຂອງຖວາຍແກ້ບົນທີ່ພວກທ່ານໄດ້ສາບານກັບພຣະຢາເວເອົາໄວ້ນັ້ນ.
12ພວກທ່ານຈະຊື່ນຊົມຍິນດີຕໍ່ຫນ້າພຣະຢາເວພຣະເຈົ້າຂອງພວກທ່ານ, ບັນດາລູກຊາຍຂອງພວກທ່ານ, ບັນດາລູກຍິງຂອງພວກທ່ານ,
ບັນດາຄົນຮັບໃຊ້ຊາຍຂອງພວກທ່ານ, ແລະບັນດາຄົນຮັບໃຊ້ຍິງຂອງພວກທ່ານ, ແລະບັນດາຄົນເລວີຜູ້ທີ່ຢູ່ໃນເມືອງຂອງພວກທ່ານ,
ເພາະເຂົາໄດ້ຮັບມໍລະດົກຫລືສ່ວນແບ່ງຫລືມໍລະດົກຂອງພວກທ່ານ.
13ຈົ່ງເອົາໃຈໃສ່ຕົວຂອງພວກທ່ານໃຫ້ດີເພື່ອພວກທ່ານຈະໄດ້ຖວາຍເຄື່ອງເຜົາບູຊາຂອງພວກທ່ານທຸກສະຖານທີ່ ທີ່ພວກທ່ານເບິ່ງເຫັນ;
14ແຕ່ທີ່ຄືພຣະຢາເວໄດ້ຊົງເລືອກອອກມາຈາກເຜົ່າຫນຶ່ງໃນທ່າມກາງເຜົ່າຕ່າງໆຂອງພວກທ່ານທີ່ພວກທ່ານຈະຖວາຍເຄື່ອງບູຊາ,
ແລະທີ່ນັ້ນພວກທ່ານຈະເຮັດທຸກສິ່ງທີ່ຂ້ານ້ອຍບັນຊາແກ່ພວກທ່ານ.
15ຢ່າງໃດກໍຕາມ, ພວກທ່ານອາດຂ້າແລະກິນສັດຕ່າງໆ ພາຍໃນປະຕູເມືອງຂອງພວກທ່ານ,
ຈົ່ງຮັບພຣະພອນຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ສຳລັບທຸກສິ່ງທີ່ພຣະອົງໄດ້ປະທານໃຫ້ພວກທ່ານ;
ທັງຄົນທີ່ບໍ່ສະອາດແລະຄົນທີ່ສະອາດຈະກິນນັ້ນ, ຄືສັດຕ່າງໆເຊັ່ນລະມັ່ງແລະກວາງ.16ແຕ່ພວກທ່ານຈະບໍ່ກິນເລືອດ;
ທ່ານຈະເທເລືອດລົງໃສ່ແຜ່ນດິນຄືເທນ້ຳ.
17ພວກທ່ານຈະບໍ່ກິນໃນປະຕູເມືອງຂອງພວກທ່ານ ເຊັ່ນ ຫນຶ່ງສ່ວນສິບຂອງພືດຜົນເປັນເມັດ, ເຫລົ້າອະງຸ່ນ, ນ້ຳມັນ ຫມາກກອກເທດ,
ລູກຫົວປີຂອງງົວແລະແກະ ຂອງພວກທ່ານ; ແລະຈະບໍ່ກິນຂອງໄຫວ້ບູຊາຖວາຍແກ້ບົນທີ່ພວກທ່ານໄດ້ສາບານເອົາໄວ້,
ຫລືບໍ່ກິນຂອງຖວາຍສະຫມັກໃຈ ຫລືບໍ່ກິນຂອງຖວາຍທີ່ນຳມາດ້ວຍມືຂອງພວກທ່ານ.
18ແທນທີ່ຈະເຮັດແນວນັ້ນ,
ພວກທ່ານຈະກິນທັງຫມົດນັ້ນໃນສະຖານທີ່ຂອງພຣະຢາເວພຣະເຈົ້າຂອງພວກທ່ານແລະພຣະເຈົ້າຂອງພວກທ່ານຈະຊົງເລືອກ ພວກທ່ານ,
ລູກຊາຍຂອງພວກທ່ານ, ລູກຍິງຂອງພວກທ່ານ, ຄົນຮັບໃຊ້ຂອງພວກທ່ານ, ແລະຄົນຮັບໃຊ້ຂອງເລວີຜູ້ທີ່ຢູ່ໃນປະຕູເມືອງຂອງທ່ານ,
ພວກທ່ານຈະຊື່ນຊົມຍິນດີຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານກ່ຽວກັບທຸກສິ່ງທີ່ພວກທ່ານໄດ້ວາງມືຂອງພວກທ່ານນັ້ນ.
19ຈົ່ງລະວັງຕົວຂອງພວກທ່ານໃຫ້ດີເພື່ອພວກທ່ານຈະບໍ່ຖິ້ມຄົນເລວີດົນເທົ່າພວກທ່ານຈະມີຊີວິດຢູ່ເທິງແຜ່ນດິນຂອງພວກທ່ານ.
20ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານຂະຫຍາຍເຂດແດນຂອງພວກທ່ານ, ຕາມທີ່ພຣະອົງໄດ້ຊົງສັນຍາແກ່ພວກທ່ານ,
ແລະພວກທ່ານເວົ້າວ່າ, ເຮົາຈະກິນຊີ້ນສັດ, ບ່ອນໃດກໍຕາມ, ໄດ້ຕາມຄວາມຕ້ອງການ.
21ສະຖານທີ່ແຫ່ງນັ້ນທີ່ພຣະຢາເວຊົງເລືອກເພື່ອສະຖາປານາພຣະນາມຂອງພຣະອົງຢູ່ຫ່າງໄກເກີນຈາກພວກທ່ານ,
ດັ່ງນັ້ນພວກທ່ານຈະຂ້າສັດສ່ວນຫນຶ່ງຈາກຝູງສັດຂອງພວກທ່ານທີ່ພຣະຢາເວໄດ້ປະທານໃຫ້ພວກທ່ານຕາມທີ່ຂ້ານ້ອຍໄດ້ບັນຊາພວກທ່ານ,
ພວກທ່ານອາດກິນພາຍໃນປະຕູເມືອງຂອງພວກທ່ານຕາມທີ່ໃຈຂອງພວກທ່ານປາຖະຫນາໄດ້.22ເຊັ່ນການກິນອູດແລະກວາງນັ້ນ,
ດັ່ງນັ້ນພວກທ່ານຈະກິນສິ່ງນັ້ນ; ຄົນທີ່ບໍ່ສະອາດເລະຄົນທີ່ສະອາດຈະກິນສິ່ງນັ້ນໄດ້ຄືກັນ.
23ຂໍແຕ່ໃຫ້ແນ່ໃຈວ່າພວກທ່ານບໍ່ກິນເລືອດ, ເພາະເລືອດຄືຊີວິດ; ພວກທ່ານຈະບໍ່ກິນຊີວິດແລະຊີ້ນນັ້ນ.24ພວກທ່ານຈະບໍ່ກິນເລືອດ,
ພວກທ່ານຈະເທເລືອດລົງແຜ່ນດິນຄືກັບເທນ້ຳ25ພວກທ່ານຈະບໍ່ກິນເລືອດ, ເພື່ອວ່າພວກທ່ານຈະໄປດີມາດີ ທັງລູກຫລານທີ່ນຳມາຂອງພວກທ່ານ,
ເພື່ອພວກທ່ານຈະເຮັດສິ່ງນີ້ຖືກຕ້ອງຕາມສາຍຕາຂອງພຣະຢາເວ.


generated on Tue Jun 17 19:01:42 2025

[26]ແຕ່ສິ່ງຕ່າງໆ ທີ່ເປັນຂອງພຣະຢາເວທີ່ພວກທ່ານມີແລະຖວາຍແກ້ບົນຕ່າງໆ ຂອງພວກທ່ານ -
ພວກທ່ານຈະເອົາສິ່ງເຫລົ່ານີ້ມາແລະໄປຍັງສະຖານທີ່ ທີ່ພຣະຢາເວຊົງເລືອກ.[27]ທີ່ນັ້ນພວກທ່ານຈະຖວາຍເຄື່ອງເຜົາບູຊາ,
ຄືຊີ້ນແລະເລືອດເທິງແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງພວກທ່ານ; ເລືອດຂອງເຄື່ອງແທ່ນບູຊາຕ່າງໆ,
ພວກເຂົາຈະຖືກເທລົງແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ແລະທ່ານຈະກິນຊີ້ນສິດ.
[28]ຈົ່ງສັງເກດແລະຟັງຖ້ອຍຄຳເຫລົ່ານີ້ທີ່ຂ້ານ້ອຍບັນຊາພວກທ່ານ, ເພື່ອພວກທ່ານຈະໄປດີມາດີ ແລະ
ພ້ອມກັບລູກຫລານທີ່ຕາມມາຂອງພວກທ່ານຊົ່ວນິຣັນດອນ,
ເມື່ອພວກທ່ານເຮັດສິ່ງດີແລະເລືອກຖືກຕ້ອງສາຍຕາຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
[29]ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານກຳຈັດຊົນຊາດທັງຫລາຍອອກໄປຕໍ່ຫນ້າຂອງພວກທ່ານ, ເມື່ອພວກທ່ານເຂົ້າໄປຂັບໄລ່ພວກເຂົາ,
ແລະພວກທ່ານຂັບໄລ່ພວກເຂົາ, ແລະອາໄສຢູ່ໃນດິນແດນຂອງພວກເຂົານັ້ນ,
[30]ຈົ່ງເອົາໃຈໃສ່ຕົວຂອງພວກທ່ານໃຫ້ດີເພື່ອພວກທ່ານຈະບໍ່ຕິດກັບໃນການເຮັດຕາມເຂົາ,
ຫລັງຈາກທີ່ພວກເຂົາຖືກທຳລາຍໄປຕໍ່ຫນ້າພວກທ່ານແລ້ວ, ຄືກັບດັກໃນການໄຕ່ຖາມເລື່ອງພະຕ່າງໆ ຂອງພວກເຂົາດ້ວຍການຖາມວ່າ,
'ຊົນຊາດພວກນີ້ນະມັດສະການພະຂອງພວກເຂົາແນວໃດ? ເຮົາຈະເຮັດຢ່າງດຽວກັນນັ້ນ'.
[31]ພວກທ່ານບໍ່ນະມັດສະການພຣະຢາເວຂອງພວກເຈົ້າ, ດ້ວຍວິທີການຢ່າງນັ້ນ ເພາະທຸກສິ່ງເປັນທີ່ຫນ້າລັງກຽດຕໍ່ພຣະຢາເວ, ສິ່ງຕ່າງໆ
ທີ່ພຣະອົງຊົງລັງກຽດ-ພວກເຂົາໄດ້ເຮັດສິ່ງເຫລົ່ານັ້ນກັບພະຕ່າງໆ ຂອງພວກເຂົາ;
ພວກເຂົາເຮັດແມ່ນແຕ່ເຜົາລູກຊາຍທັງຫລາຍແລະລູກຍິງທັງຫລາຍຂອງພວກເຂົາດ້ວຍໄຟເພື່ອພະຕ່າງໆ ຂອງພວກເຂົາ.,
[32]ສິ່ງໃດກໍຕາມທີ່ຂ້ານ້ອຍບັນຊາພວກທ່ານ ຈົ່ງປະຕິບັດຕາມ. ຢ່າເພີ່ມເຕີມເຂົ້າໄປຫລືຕັດອອກ.

 generated on Tue Jun 17 19:01:42 2025

# 13

1ຖ້າຫາກຜູ້ທຳນວາຍຫລືຜູ້ແກ້ຄວາມຝັນ, ທຳນວາຍວ່າຝັນເຫັນຄົນຫນຶ່ງລຸກຂຶ້ນທ່າມກາງພວກທ່ານ,
2ແລະຫມາຍສຳຄັນຫລືການອັດສະຈັນຖ້າເຂົາເວົ້າແກ່ທ່ານນັ້ນເປັນຢ່າງນີ້ວ່າ,' ໃຫ້ພວກເຮົາໄປຕິດຕາມພະອື່ນໆ ທີ່ພວກທ່ານບໍ່ຮູ້ຈັກ
ແລະໃຫ້ເຮົານະມັດສະການພະນັ້ນ,'3ຢ່າຟັງຖ້ອຍຄຳເຫລົ່ານັ້ນຂອງຜູ້ທຳນວາຍນັ້ນ,
ເພາະພຣະຢາເວພຣະເຈົ້າຂອງພວກທ່ານກຳລັງທົດສອບພວກທ່ານ;
ເພື່ອຈະໄດ້ຮູ້ວ່າພວກທ່ານຮັກພຣະຢາເວພຣະເຈົ້າຂອງພວກທ່ານສຸດຈິດສຸດໃຈ ແລະສຸດກຳລັງຄວາມຄຶດຫລືບໍ່.

4ພວກທ່ານຈະດຳເນີນຕາມພຣະຢາເວພຣະເຈົ້າຂອງພວກທ່ານ, ຖວາຍກຽດແດ່ພຣະອົງ, ຄືຮັກສາພະບັນຍັດຕ່າງໆຂອງພຣະອົງ,
ແລະເຊື່ອຟັງພຣະສຸລະສຽງຂອງພຣະອົງ, ແລະພວກທ່ານຈະນະມັດສະການພຣະອົງແລະຜູກພັນຢູ່ກັບພຣະອົງ.5ຜູ້ທີ່ຝັນເຫັນນັ້ນຈະຕ້ອງຕາຍ
ເພາະເຂົາໄດ້ເວົ້າໃຫ້ພຣະຢາເວພຣະເຈົ້າຂອງພວກທ່ານ, ແລະໄດ້ຊົງນຳພວກທ່ານອອກມາຈາກດິນແດນອີຢິບ,
ແລະເປັນຜູ້ທີ່ຊົງໄຖ່ພວກທ່ານອອກຈາກເຮືອນທາດ. ຜູ້ນັ້ນຕ້ອງການນຳພວກທ່ານ ຕີໂຕອອກຫ່າງວິຖີຊີວິດພຣະຢາເວພຣະເຈົ້າຂອງພວກທ່ານ.
ດັ່ງນັ້ນຈົ່ງເອົາຄວາມຊົ່ວອອກຈາກທ່າມກາງພວກທ່ານເສຍ.
6ສົມມຸດວ່າພີ່ນ້ອງຂອງພວກທ່ານ, ລູກຂອງແມ່ຂອງພວກທ່ານ, ຫລືລູກຜູ້ຍິງຂອງພວກທ່ານ,
ຫລືລູກຊາຍຂອງພວກທ່ານຫລືເມຍຂອງພວກທ່ານທີ່ຢູ່ໃນອ້ອມກອດຂອງພວກທ່ານ,
ຫລືຫມູ່ຂອງພວກທ່ານທີ່ເປັນເຫມືອນດວງໃຈຂອງພວກທ່ານ ເຂົ້າມາຫາພວກທ່ານຢ່າງລັບໆ ແລະເວົ້າວ່າ,
'ໃຫ້ພວກເຮົາໄປນະມັດສະການພະອື່ນໆ ທີ່ພວກທ່ານບໍ່ຮູ້ຈັກ, ບໍ່ວ່າພວກທ່ານຫລືບັນພະບຸຣຸດຂອງພວກທ່ານ'.7ຄືພະໃດໆ
ຂອງປະຊາຊົນຕ່າງໆ ທີ່ຢູ່ລ້ອມຮອບພວກທ່ານ, ຢູ່ໃກ້ພວກທ່ານຫລືຢູ່ໄກຈາກພວກທ່ານ, ຈາກສຸດປາຍແຜ່ນດິນໂລກ
ດ້ານຫນຶ່ງຍັງຈຸດສິ້ນສຸດຂອງປາຍແຜ່ນດິນໂລກ.
8ຢ່າຍອມຮັບເຂົາຫລືຟັງເຂົາ, ຢ່າໃຫ້ດວງຕາຂອງພວກທ່ານສົງສານເຂົາ, ຢ່າໃຫ້ຊີວິດເຂົາຫລືເຊື່ອງໄວ້.9ແຕ່ພວກທ່ານຈົ່ງຂ້າເຂົາເສຍ;
ມືຂອງພວກທ່ານຈະເປັນມືທຳອິດທີ່ເຮັດໃຫ້ເຂົາຕາຍ, ແລະຫລັງຈາກນັ້ນຈຶ່ງເປັນມືຂອງປະຊາຊົນທຸກຄົນ.
10ພວກທ່ານຈະຂ້າເຂົາໃຫ້ຕາຍດ້ວຍການດຶກກ້ອນຫີນໃສ່,
ເພາະເຂົາໄດ້ພະຍາຍາມດຶງພວກທ່ານອອກຈາກພຣະຢາເວພຣະເຈົ້າຂອງພວກທ່ານ, ຜູ້ໄດ້ຊົງນຳພວກທ່ານອອກມາຈາກປະເທດອີຢິບ,
ແລະອອກຈາກບ່ອນທີ່ເຂົາເຄີຍຕົກເປັນເຮືອນທາດ11ຊາວອິສະຣາເອນທັງຫມົດຈະໄດ້ຍິນແລະເກງຢ້ານ,
ແລະຈະບໍ່ເຮັດຄວາມຊົ່ວແນວນີ້ທ່າມກາງພວກທ່ານອີກຕໍ່ໄປ.
12ຖ້າພວກທ່ານຟັງຄົນໃດກ່າວເຖິງເມືອງຫນຶ່ງໃນເມືອງທັງຫລາຍຂອງພວກທ່ານ,
ທີ່ພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ພວກທ່ານອາໄສຢູ່ນັ້ນ:
13ມີຄົນຫມຸ່ມບາງຄົນເປັນຄົນຊົ່ວຮ້າຍທີ່ໄດ້ອອກໄປຈາກພວກທ່ານແລະໄດ້ດຶງບັນດາຜູ້ອາໄສຢູ່ເມືອງຂອງພວກທ່ານແລະເວົ້າວ່າ,'ໃຫ້ພວກເຮົາໄປແລະນະມັດສະກ
ທີ່ພວກທ່ານບໍ່ຮູ້ຈັກ'.14ແລ້ວພວກທ່ານຈະກວດສອບຫລັກຖານ, ເຮັດການຄົ້ນຫາ, ແລະຖາມຢ່າງລະອຽດຖີ່ຖ້ວນ.
ເມື່ອພວກທ່ານຄົ້ນພົບວ່າເລື່ອງນັ້ນເປັນຄວາມຈິງແລະຖືກຕ້ອງແນ່ນອນທີ່ມີການເຮັດຊົ່ວຕ່ຳຊ້າເກີດຂຶ້ນໃນທ່າມກາງພວກທ່ານແລ້ວ,
ພວກທ່ານລົງມືເຮັດສາ.
15ພວກທ່ານຈົ່ງໂຈມຕີຄົນຢູ່ໃນເມືອງນັ້ນດ້ວຍຄົມດາບ ທຳລາຍໃຫ້ຫມົດ, ແລະປະຊາຊົນທັງຫມົດທີ່ອາໄສຢູ່ນັ້ນ,
ຕະຫລອດຈົນຝູງສັດຂອງພວກເຂົາດ້ວຍ, ຈົ່ງທຳລາຍດ້ວຍຄົມດາບ.16ພວກທ່ານຈະຮວບຮວມຂອງທີ່ຢູ່ໃນນັ້ນ
ນຳມາໄວ້ກາງຫົນທາງແລະເຜົາເມືອງນັ້ນລວມທັງຂອງທີ່ຈັບມານຳມືໄດ້ທັງຫມົດດ້ວຍ, ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານ,
ເມືອງນັ້ນຈະຜຸພັງໄປເປັນນິດ, ມັນຈະຕ້ອງຖືກສ້າງຂຶ້ນມາອີກ.
17ຕ້ອງບໍ່ໃຫ້ມີແມ່ນແຕ່ສິ່ງດຽວໃນສິ່ງເຫລົ່ານັ້ນຖືກແຍກໄວ້ເພື່ອການທຳລາຍຈະຢູ່ໃນມືຂອງພວກທ່ານ, ນີ້ເປັນສິ່ງທີ່ພວກທ່ານຕ້ອງເຮັດ,
ເພື່ອວ່າພຣະຢາເວຈະເອົາຄວາມໂກດຮ້າຍອັນຮຸນແຮງອອກໄປ, ແຕ່ຈະສຳແດງຄວາມເມດຕາພວກທ່ານ, ມີຄວາມສົງສານພວກທ່ານ,
ແລະຊົງເຮັດໃຫ້ພວກທ່ານເພີ່ມຈຳນວນຫລາຍຂຶ້ນ, ຕາມທີ່ພຣະອົງໄດ້ສັນຍາແກ່ບັນພະບຸຣຸດຂອງພວກທ່ານ.
18ພຣະອົງຈະຊົງນຳສິ່ງນີ້ເພາະພວກທ່ານຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ເພື່ອຖືຮັກສາພຣະບັນຍັດທັງຫມົດທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້,
ເພື່ອເຮັດສິ່ງທີ່ຖືກຕ້ອງໃນສາຍຕາພຣະຢາເວພຣະເຈົ້າຂອງພວກທ່ານ.

 generated on Tue Jun 17 19:01:42 2025

# 14

[1]ພວກທ່ານເປັນປະຊາຊົນຂອງພຣະຢາເວພຣະເຈົ້າຂອງພວກທ່ານ. ຈົ່ງຢ່າປາດເນື້ອຫນັງຕົວເອງ, ຫລືຂູດສ່ວນໃດໆ
ຂອງໃບຫນ້າຂອງພວກທ່ານເພື່ອຄົນຕາຍ.[2]ເພາະພວກທ່ານເປັນຊົນຊາດຫນຶ່ງທີ່ຖືກແຍກໄວ້ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານ,
ແລະພຣະຢາເວຊົງເລືອກພວກທ່ານໃຫ້ເປັນປະຊາຊົນເພື່ອກຳມະສິດຂອງພຣະອົງເອງ, ຫລາຍກວ່າປະຊາຊົນທັງຫມົດທີ່ຢູ່ພື້ນແຜ່ນດິນນີ້.

[3]ພວກທ່ານຈະບໍ່ກິນອາຫານທີ່ຫນ້າລັງກຽດໃດໆ.[4]ເຫລົ່ານີ້ຄືສັດຕ່າງໆທີ່ພວກທ່ານຮັບປະທານໄດ້ ຄື: ງົວ, ແກະແລະແບ້,[5]ກວາງ, ແກະປ່າ,
ແບ້ປ່າ, ຫລືຟານ, ຄືສັດທັງຫລາຍທີ່ມີໂບກຕີນເປັນກີບ, ແລະຄ້ຽວເອື້ອງໄດ້ທຸກຊະນິດ.
[6]ພວກທ່ານກິນສັດໃດໆທີ່ແຍກກີບໄດ້, ຄືສັດທີ່ແຍກກີບອອກເປັນສອງສ່ວນ,
ແລະຄ້ຽວເອື້ອງ[7]ພວກທ່ານຕ້ອງບໍ່ກິນສັດບາງຊະນິດທີ່ຄ້ຽວເອື້ອງຫລືມີກີບເປັນສອງສ່ວນຄື: ອູດກະຕ່າຍ, ເຫມັ້ນ, ເພາະພວກມັນຄ້ຽວເອື້ອງ,
ແຕ່ບໍ່ແຍກກີບ, ພວກມັນເປັນມົນທິນສຳລັບພວກທ່ານ.
[8]ຫມູເປັນສັດທີ່ເປັນມົນທິນດ້ວຍເຊັ່ນກັນເພາະມັນມີກີບແຍກແຕ່ບໍ່ໄດ້ຄ້ຽວເອື້ອງ; ມັນເປັນສັດມົນທິນສຳລັບພວກທ່ານ, ຢ່າກິນຊີ້ນຫມູ
ແລະຢ່າແຕະຕ້ອງຊາກຂອງມັນ, ນອກຈາກສິ່ງເຫລົ່ານີ້.
[9]ບັນດາສິ່ງຕ່າງໆ ທີ່ຢູ່ໃນນ້ຳ ພວກທ່ານກິນໄດ້ ຄື: ສັດທີ່ມີເກັດ;[10]ແຕ່ສິ່ງທີ່ບໍ່ມີເກັດນັ້ນ ພວກທ່ານຕ້ອງບໍ່ກິນ;
ເພາະມັນເປັນມົນທິນສຳລັບພວກທ່ານ.
[11]ນົກທຸກໂຕທີ່ສະອາດພວກທ່ານກິນໄດ້.[12]ແຕ່ເຫລົ່ານີ້ແມ່ນນົກທັງຫລາຍທີ່ພວກທ່ານຕ້ອງບໍ່ກິນ: ນົກອິນຊີ, ນົກແຮ້ງຫນວດແບ້, ນົກອອກ,
[13]ຢ່ຽວແດງ ແລະຢ່ຽວດຳ, ບໍ່ວ່ານົກຢ່ຽວໃດໆ ກໍຕາມ.
[14]ພວກທ່ານຕ້ອງບໍ່ກິນນົກກະທາຊະນິດໃດໆ,[15]ແລະນົກກະຈອກເທດ, ແລະນົກເຄົ້າແມວ, ນົກນາງນວນ ແລະຢ່ຽວ ນົກເຂົາຊະນິດຕ່າງໆ,
[16]ນົກເຄົ້າແມວນ້ອຍ, ນົກເຄົ້າແມວໃຫຍ່ ນົກເຄົ້າແມວສີຂາວ,[17]ນົກກະທຸງ, ນົກແຮ້ງ.
[18]ພວກທ່ານຕ້ອງບໍ່ກິນນົກກະສາດຳ, ນົກກະສາຊະນິດຕ່າງໆ, ນົກຫົວຂວານ, ແລະຄ້າງຄາວ.[19]ສັດມີປີກທຸກຊະນິດ,
ຈຳພວກແມງເປັນສັດມີມົນທິນສຳລັບພວກທ່ານ; ພວກມັນຕ້ອງບໍ່ຖືກນຳມາກິນ.[20]ພວກທ່ານຈະກິນສັດມີປີກຕ່າງໆ ທີ່ສະອາດໄດ້ທຸກຊະນິດ.
[21]ພວກທ່ານບໍ່ຕ້ອງກິນສິ່ງໃດທີ່ຕາຍເອງ; ພວກທ່ານເອົາໃຫ້ຄົນຕ່າງຊາດໃນເມືອງຂອງພວກທ່ານໄດ້ເພື່ອເຂົາຈະໄດ້ກິນມັນ;
ຫລືພວກທ່ານຈະຂາຍໃຫ້ຄົນຕ່າງຊາດກໍໄດ້. ເພາະພວກທ່ານເປັນຊົນຊາດຫນຶ່ງທີ່ໄດ້ຖືກແຍກໄວ້ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານ.
ພວກທ່ານຕ້ອງບໍ່ຕົ້ມລູກແບ້ອ່ອນໃນນ້ຳນົມແມ່ຂອງມັນ.
[22]ພວກທ່ານຕ້ອງຖວາຍຜົນລະປູກທີ່ພວກທ່ານໄດ້ແຕ່ລະປີນັ້ນ, ຈາກທົ່ງນາປີຕໍ່ປີ.
[23]ພວກທ່ານຕ້ອງກິນຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານ,
ໃນທີ່ສະຖານທີ່ພຣະອົງຈະເລືອກໃຫ້ເປັນສະຖານທີ່ນະມັດສະການຖວາຍຈາກພືດຜົນຂອງພວກທ່ານ, ຈາກເຫລົ້າອະງຸ່ນໃຫມ່ຂອງພວກທ່ານ,
ແລະສັດຫົວປີຈາກຝູງສັດຂອງພວກທ່ານ; ເພື່ອພວກທ່ານຈະຮຽນຮູ້ທີ່ຈະຖວາຍກຽດຕິຍົດຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານສະເຫມີ.
[24]ຖ້າຫາກການເດີນທາງນັ້ນໄກເກີນກວ່າທີ່ພວກທ່ານຈະສາມາດແບກສິ່ງຂອງໄປໄດ້, ເພາະສະຖານທີ່ໆ
ພຣະຢາເວພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງເລືອກໃຫ້ເປັນສະຖານທີ່ນະມັດສະການຂອງພຣະອົງຢູ່ທີ່ນັ້ນຢູ່ຫ່າງໄກພວກທ່ານຫລາຍເກີນໄປ,
ພຣະຢາເວຊົງອວຍພວກທ່ານ,[25]ພວກທ່ານຈົ່ງແລກປ່ຽນຂອງຖວາຍໃຫ້ກາຍເປັນເງິນແທນ,
ຈົ່ງຖືເງິນນັ້ນເອົາໄວ້ໃນມືຂອງພວກທ່ານແລະຍ່າງໄປຍັງສະຖານທີ່ໆ ພຣະຢາເວພວກທ່ານຈະຊົງເລືອກນັ້ນ.
[26]ທີ່ນັ້ນພວກທ່ານຕ້ອງການໃຊ້ເງິນສຳລັບຊື້ສິ່ງທີ່ພວກທ່ານປາຖະຫນາ ຄື: ຊີ້ນງົວ, ຫລືຊີ້ນແກະ, ສິ່ງໃດທີ່ພວກທ່ານປາຖະຫນາ, ພວກທ່ານຈົ່ງກິນ
ດື່ມສິ່ງນັ້ນຕໍ່ຫນ້າພຣະຢາເວພຣະເຈົ້າຂອງພວກທ່ານ.[27]ສ່ວນຄົນເລວີຜູ້ທີ່ອາໄສໃນປະຕູເມືອງຂອງພວກທ່ານຈົ່ງຢ່າຖິ້ມພວກເຂົາ,
ເພາະເຂົາບໍ່ໄດ້ສ່ວນແບ່ງຫລືຮັບມໍຣະດົກກັບພວກທ່ານເລີຍ.
[28]ພວກທ່ານຈະນຳເອົາທັງຫມົດຈາກຜົນຜະລິດໃນປີດຽວກັນນັ້ນມາ, ແລະພວກທ່ານຈະສະສົມເອົາໄວ້ໃນປະຕູເມືອງຂອງພວກທ່ານ;
[29]ແລະຄົນເລວີ,
ເນື່ອງຈາກເຂົາບໍ່ໄດ້ຮັບສ່ວນແບ່ງຫລືມໍຣະດົກກັບພວທ່ານກັບຄົນຕ່າງຊາດແລະເດັກກຳພ້າແລະແມ່ຫມ້າຍຜູ້ທີ່ອາໄສຢູ່ໃນປະຕູເມືອງຂອງພວກທ່ານ,
ຈະມາແລະກິນອີ່ມຫນຳ, ຈົ່ງເຮັດແນວນີ້ເພື່ອວ່າພຣະຢາເວຂອງພວກທ່ານຈະອວຍພອນພວກທ່ານໃນການງານທຸກຢ່າງທີ່ມືຂອງພວກທ່ານເຮັດ.

 generated on Tue Jun 17 19:01:42 2025

# 15

[1]ເມື່ອຮອດທ້າຍປີຂອງປີທີເຈັດ, ພວກທ່ານຕ້ອງຍົກຫນີ້ສິນ ແລະໃຫ້ເຈົ້າຫນີ້ທຸກຄົນຍົກເລີກຫນີ້.[2]ຫນີ້ສິນທີ່ເຂົາໃຫ້ເພື່ອນບ້ານເຂົາຢືມ:
ເຂົາຈະບໍ່ຮຽກຮ້ອງເອົາຈາກເພື່ອນບ້ານຂອງພວກເຂົາ; ຫລືຈາກພີ່ນ້ອງຂອງເຂົາເພາະການຍົກຫນີ້ຂອງພຣະຢາເວທີ່ໄດ້ປະກາດນີ້.
[3]ພວກທ່ານສາມາດຮຽກຮ້ອງຈາກຄົນຕ່າງຊາດໄດ້ແຕ່ສິ່ງໃດກໍຕາມທີ່ເປັນຂອງພວກທ່ານຊຶ່ງຢູ່ກັບພີ່ນ້ອງຂອງພວກທ່ານ;
ມືຂອງພວກທ່ານຈະຕ້ອງຍອມປ່ອຍສິ່ງນັ້ນໄປ.

[4]ຢ່າງໃດກໍຕາມ,
ບໍ່ສົມຄວນໃຫ້ມີຄົນຍາກຈົນຢູ່ໃນທ່າມກາງພວກທ່ານເພາະ(ພຣະຢາເວຈະອວຍພອນພວກທ່ານໃນດິນແດນທີ່ພຣະອົງປະທານໃຫ້ແກ່ພວກທ່ານເປັນກໍາມະສິດຄອບ
[5]ຖ້າທ່ານຟັງສຽງຂອງຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ເພື່ອຖືຮັກສາພຣະບັນຍັດທັງຫລາຍເຫລົ່ານີ້ຂ້ານ້ອຍກໍາລັງບັນຊາພວກທ່ານໃນວັນນີ້.
[6]ເພາະພຣະຢາເວພຣະເຈົ້າຂອງພວກທ່ານຊົງອວຍພອນພວກທ່ານ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້;
ພວກທ່ານຈະໃຫ້ຊົນຊາດຕ່າງໆຢືມແຕ່ພວກທ່ານຈະບໍ່ຢືມ, ພວກທ່ານຈະປົກຄອງເຫນືອຊົນຊາດຕ່າງໆ ຫລາຍ,
ແຕ່ພວກເຂົາຈະບໍ່ປົກຄອງເຫນືອພວກທ່ານ.
[7]ຄືຄົນທີ່ເປັນພີ່ນ້ອງຂອງພວກທ່ານ, ທີ່ອາໄສຢູ່ໃນປະຕູເມືອງໃນດິນແດນຂອງພວກທ່ານ,
ທີ່ພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ແກ່ພວກທ່ານພວກທ່ານ,
ຕ້ອງບໍ່ເຮັດໃຫ້ໃຈແຂງກະດ້າງຫລືປິດໃຈຕໍ່ພີ່ນ້ອງທີ່ຍາກຈົນຂອງພວກທ່ານ;
[8]ແຕ່ພວກທ່ານຕ້ອງມີໃຈເອື້ອເຟື້ອເພື່ອເຂົາແລະໃຫ້ເຂົາຢືມຈົນພຽງພໍກັບຄວາມຕ້ອງການຂອງເຂົາ.
[9]ຈົ່ງລະວັງເພື່ອຈະບໍ່ໃຫ້ຄວາມຊົ່ວໃນໃຈຂອງພວກທ່ານ, ທີ່ກ່າວວ່າ, ປີທີເຈັດ, ປີແຫ່ງການປົດປ່ອຍໃກ້ເຂົ້າມາແລ້ວ,
ເພື່ອພວກທ່ານຈະບໍ່ຍອມໃຫ້ກູ້ຢືມ ເມື່ອລາວຮ້ອງຫາພຣະຢາເວພວກທ່ານກໍເປັນຝ່າຍຜິດ.[10]ພວກທ່ານຕ້ອງໃຫ້ເຂົາ,
ແລະໃຈຂອງພວກທ່ານກໍຕ້ອງເຕັມໃຈໃຫ້ເມື່ອໃຫ້ເຂົາແລ້ວ,
ເພາະພຣະຢາເວຊົງຕອບແທນພວກທ່ານດ້ວຍການອວຍພອນພວກທ່ານໃນການງານທຸກຢ່າງ ແລະໃນທຸກສິ່ງທີ່ມືຂອງພວກເຂົາເຮັດ.
[11]ເພາະຄົນຍາກຈົນຈະໄດ້ຫມົດ ໄປແຕ່ຈະຍັງຄົງມີຢູ່ໃນດິນແດນນີ້; ດັ່ງນັ້ນຂ້ານ້ອຍຈຶ່ງບັນຊາພວກທ່ານແລະກ່າວວ່າ,
ພວກທ່ານຕ້ອງມີໃຈເອື້ອເຟື້ອຕໍ່ພີ່ນ້ອງຂອງພວກທ່ານ, ຄົນທີ່ຂັດສົນຂອງພວກທ່ານ, ແລະຄົນຍາກຈົນໃນດິນແດນຂອງພວກທ່ານ.
[12]ຖ້າພີ່ນ້ອງຂອງພວກທ່ານ, ບໍ່ວ່າເປັນຄົນເຮັບເຣີຜູ້ຊາຍ, ຫລືຍິງ, ກໍດີຂາຍຕົວເອງເປັນຄົນຮັບໃຊ້ພວກເຈົ້າເປັນເວລາຫົກປີ,
ເມື່ອປີທີເຈັດມາເຖິງໃຫ້ພວກທ່ານປ່ອຍລາວເປັນອິສະຫລະຈາກພວກທ່ານ.[13]ພວກທ່ານບໍ່ຕ້ອງປ່ອຍໃຫ້ເຂົາໄປມືເປົ່າ.
[14]ພວກທ່ານຕ້ອງຈັດຕຽມດ້ວຍໃຈກວ້າງຂວາງ ແກ່ເຂົາ ຄືຂອງຈາກຝູງສັດຂອງພວກທ່ານ, ຈາກລານນວດເຂົ້າຂອງພວກທ່ານ,
ແລະຈາກບໍ່ຢໍ່າເກງຂອງພວກທ່ານ. ດັ່ງທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງອວຍພອນພວກທ່ານນັ້ນ.
[15]ພວກທ່ານຕ້ອງໃຫ້ເຂົາ ພວກທ່ານຕ້ອງລະນຶກເຖິງເມື່ອພວກທ່ານເປັນທາດຢູ່ໃນດິນແດນອີຢິບ,
ແລະທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງໄຖ່ພວກທ່ານມາ: ດັ່ງນັ້ນໃນວັນນີ້ ຂ້ານ້ອຍຈຶ່ງບັນຊາໃຫ້ພວກທ່ານເຮັດສິ່ງນີ້.
[16]ສິ່ງນີ້ຈະເກີດຂຶ້ນຖ້າຫາກເຂົາເວົ້າກັບທ່ານວ່າ, 'ຂ້ານ້ອຍຈະບໍ່ຈາກທ່ານໄປທີ່ໃດ ເພາະເຂົາຮັກພວກທ່ານ,'ແລະບ້ານຂອງພວກທ່ານ
ແລະເພາະເຂົາມີຄວາມສຸກໃຈທີ່ໄດ້ຢູ່ກັບພວກທ່ານແລ້ວ,[17]ພວກທ່ານຕ້ອງເອົາເຫລັກປາຍແຫລມແລະແທງທະລຸຫູຂອງເຂົາໄປຕິດທີ່ປະຕູ,
ແລະເຂົາຈະເປັນທາດພວກທ່ານຕະຫລອດໄປ. ພວກທ່ານຕ້ອງເຮັດຢ່າງດຽວກັນນີ້ກັບທາດຍິງຂອງທ່ານດ້ວຍ.
[18]ການທີ່ພວກທ່ານຕ້ອງປ່ອຍພວກເຂົາໃຫ້ເປັນອິສະຫລະຈາກທ່ານ, ຕ້ອງບໍ່ເປັນເລື່ອງຍາກຈາກທ່ານດ້ວຍ
ເພາະພວກເຂົາໄດ້ຮັບໃຊ້ພວກທ່ານມາເຖິງຫົກປີແລະໄດ້ຮັບຄ່າແຮງຫລາຍກວ່າຄົນອື່ນເປັນສອງເທົ່າ.
ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງອວຍພອນທຸກຢ່າງທີ່ທ່ານເຮັດ.
[19]ສັດຫົວປີໃນສັດຂອງພວກທ່ານ ພວກທ່ານຕ້ອງແຍກເອົາໄວ້ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານ.
ພວກທ່ານຈະບໍ່ໃຊ້ງານສັດຫົວປີໃນຝູງສັດຂອງພວກທ່ານ, ຫລືບໍ່ຕັດຂົນສັດຫົວປີຈາກຝູງສັດຂອງທ່ານ.
[20]ພວກທ່ານຕ້ອງກິນສັດຫົວປີຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານປີຕໍ່ປີໃນສະຖານທີ່
ທີ່ພຣະຢາເວຊົງເລືອກພວກທ່ານແລະຄົວເຮືອນຂອງພວກທ່ານ ຖ້າມັນມີຕໍາຫນິໃດໆ ເຊັ່ນ[21]ຖ້າມັນພິການຕາບອດ ຫລືມີຕໍາຫນິໃດໆ ກໍຕາມ,
ພວກທ່ານຕ້ອງບໍ່ນໍາມາຖວາຍເປັນເຄື່ອງບູຊາແດ່ພຣະຢາເວພຣະເຈົ້າຂອງພວກທ່ານ.
[22]ພວກທ່ານຈະກິນມັນພາຍໃນປະຕູເມືອງຂອງພວກທ່ານ; ທັງຄົນເປັນມົນທິນແລະຄົນສະອາດຕ້ອງກິນຄືກັນ,
ພວກທ່ານກິນລະມັງຫລືກວາງຫນຶ່ງໂຕ.[23]ສິ່ງດຽວທີ່ພວກທ່ານບໍ່ກິນຄືເລືອດຂອງມັນ; ພວກທ່ານຕ້ອງເທເລືອດຂອງມັນລົງດິນຄືເຫນ້ຳ.

# 16

[1]ຈົ່ງຖືປະຕິບັດໃນເດືອນອາບີບ, ແລະຖືຮັກສາປັດສະຄາຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ ເພາະໃນເດືອນອາບີບນັ້ນ
ພຣະເຈົ້າຂອງພວກທ່ານ, ໄດ້ນຳພວກທ່ານອອກມາຈາກອີຢິບໃນຕອນກາງຄືນ.
[2]ພວກທ່ານຈະຖວາຍປັດສະຄາຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານດ້ວຍບາງສ່ວນຈາກຝູງສັດໃນສະຖານທີ່
ທີ່ພຣະຢາເວຊົງເລືອກເປັນສະຖານທີ່ນະມັດສະການ.

[3]ພວກທ່ານຈະບໍ່ກິນເຂົ້າຈີ່ທີ່ມີເຊື້ອແປ້ງ; ແລະເຄື່ອງບູຊານັ້ນ ເປັນເວລາເຈັດວັນ ພວກທ່ານຈະກິນເຂົ້າຈີ່ບໍ່ມີເຊື້ອແປ້ງ, ພ້ອມກັບເຄື່ອງບູຊາ;
ເຂົ້າຈີ່ແຫ່ງຄວາມທຸກໃຈ ເພາະພວກທ່ານໄດ້ອອກມາຈາກດິນແດນອີຢິບຢ່າງໄວ.
ຈົ່ງເຮັດສິ່ງນີ້ຕະຫລອດຊີວິດຂອງພວກທ່ານເພື່ອລະນຶກເຖິງວັນນັ້ນທີ່ພວກທ່ານໄດ້ອອກມາຈາກອີຢິບ.
[4]ເຊື້ອແປ້ງຕ້ອງບໍ່ມີໃນທ່າມກາງຂອງພວກທ່ານພາຍໃນຮົ້ວຂອງພວກທ່ານເປັນເວລາສິບເຈັດວັນ; ແລະຕ້ອງບໍ່ມີເນື້ອໃດໆ
ທີ່ພວກທ່ານຖວາຍໃນຕອນແລງຂອງມື້ທຳອິດຈົນຮອດຄ່ຳ.
[5]ພວກທ່ານຕ້ອງບໍ່ຖວາຍປັດສະຄາພາຍໃນປະຕູເມືອງໃດໆ ຂອງພວກທ່ານທີ່ພຣະຢາເວຂອງພວກທ່ານປະທານໃຫ້.[6]ແຕ່ຊົງຖວາຍເຄື່ອງບູຊາ,
ໃນສະຖານທີ່ ທີ່ພຣະຢາເວຊົງເລືອກໃຫ້ເປັນທີ່ນະມັດສະການນັ້ນ. ທີ່ນັ້ນພວກທ່ານຖວາຍປັດສະຄາໃນຕອນແລງເມື່ອຕາເວັນຕົກດິນ,
ໃນເວລານັ້ນຂອງປີພວກທ່ານໄດ້ອອກມາຈາກອີຢິບ.
[7]ພວກທ່ານຕ້ອງຢ່າງແລະກິນປັດສະຄານັ້ນໃນສະຖານທີ່ ທີ່ພຣະຢາເວຂອງພວກທ່ານຊົງເລືອກ,
ໃນຕອນເຊົ້າທີ່ພວກທ່ານຈະຫັນກັບແລະໄປຍັງເຕັນຂອງພວກທ່ານ.[8]ເປັນເວລາຫົກວັນພວກທ່ານຈະກິນເຂົ້າຈີ່ບໍ່ມີເຊື້ອ, ໃນວັນທີເຈັດ
ຈະມີການປະຊຸມນະມັດສະການພຣະຢາເວພຣະເຈົ້າຂອງພວກທ່ານ; ໃນມື້ນັ້ນພວກທ່ານຈະບໍ່ເຮັດວຽກ.
[9]ພວກທ່ານຈົ່ງນັບໄປໃຫ້ຄົບເຈັດອາທິດ; ເພື່ອຕົວຂອງພວກທ່ານ
ຈາກເວລານັ້ນທີ່ພວກທ່ານເລີ່ມຕົ້ນເກັບກ່ຽວຕົ້ນເຂົ້າພວກທ່ານຕ້ອງເລີ່ມຕົ້ນນັບໄປເຈັດອາທິດ.
[10]ພວກທ່ານຕ້ອງຖືຮັກສາເທສະການເພື່ອພຣະຢາເວພຣະເຈົ້າຂອງພວກທ່ານພ້ອມກັບຖວາຍຂອງຖວາຍຕາມໃຈມັກຈາກມືຂອງພວກທ່ານທີ່ພວກທ່ານຈະໃຫ້,
ຕາມທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງອວຍພອນພວກທ່ານ.
[11]ພວກທ່ານຈະຊື່ນຊົມຍິນດີຕໍ່ພຣະພັກພຣະຢາເວພຣະເຈົ້າຂອງທ່ານ ຄືພວກທ່ານ ລູກຊາຍຂອງພວກທ່ານ, ລູກຜູ້ຍິງຂອງພວກທ່ານ,
ຄົນຮັບໃຊ້ຊາຍຂອງພວກທ່ານ, ຄົນຮັບໃຊ້ຍິງຂອງພວກທ່ານ, ຄົນເລວີຢູ່ໃນປະຕູເມືອງທັງຫລາຍຂອງພວກທ່ານ ແລະຄົນຕ່າງຊາດ, ລູກກຳພ້າ,
ແລະແມ່ຫມ້າຍທີ່ອາໄສຢູ່ໃນທ່າມກາງຂອງພວກທ່ານ,
ສະຖານທີ່ທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງເລືອກເພື່ອເປັນສະຖານທີ່ນະມັດສະການຂອງພຣະອົງ.
[12]ພວກທ່ານຈະລະນຶກເຖິງຄາວທີ່ພວກທ່ານເປັນທາດໃນເອຢິບ; ພວກທ່ານຕ້ອງຖືປະຕິປັດກົດບັນຍັດຕ່າງໆເຫລົ່ານັ້ນ.
[13]ພວກທ່ານຕ້ອງຖືຮັກສາເທສະການອາທິດເປັນເວລາເຈັດວັນຫລັງຈາກພວກທ່ານໄດ້ຮວບຮວມການເກັບກ່ຽວຈາກລານນວດເຂົ້າຂອງພວກທ່ານແລະຈາກອ່າງຢຽ
ຂອງພວກທ່ານ.[14]ພວກທ່ານຈະຊື່ນຊົມຍິນດີໃນລະຫວ່າງເທສະການຂອງພວກທ່ານ-ຄືພວກທ່ານ, ລູກຊາຍ, ແລະລູກຍິງຂອງພວກທ່ານ,
ຄົນຮັບໃຊ້ຊາຍແລະຍິງຂອງພວກທ່ານ, ຄົນເລວີແລະຄົນຕ່າງຊາດ, ແລະລູກກຳພ້າ, ແລະແມ່ຫມ້າຍ
ທີ່ອາໄສຢູ່ໃນປະຕູເມືອງທັງຫລາຍຂອງພວກທ່ານ.
[15]ເປັນເວລາເຈັດວັນ ພວກທ່ານຕ້ອງຖືປະຕິບັດເທສະການນັ້ນເພື່ອພຣະຢາເວພຣະເຈົ້າຂອງພວກທ່ານໃນສະຖານທີ່
ທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງເລືອກ, ເພາະພຣະຢາເວພຣະເຈົ້າຂອງພວກທ່ານຈະອວຍພອນພວກທ່ານໃນການເກັບກ່ຽວທຸກຢ່າງ
ແລະໃນການງານເຮັດວຽກດ້ວຍມືຂອງພວກທ່ານທຸກຢ່າງ, ແລະພວກທ່ານຕ້ອງຊື່ນຊົມຍິນດີຢ່າງເຕັມທີ່.
[16]ເວລາສາມຄັ້ງໃນຫນຶ່ງປີທີ່ບັນດາຜູ້ຊາຍທັງຫມົດຂອງພວກທ່ານຕ້ອງເຝົ້າຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານໃນສະຖານທີ່
ທີ່ພຣະຢາເວຊົງເລືອກ: ໃນເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງໃນເທສະການອາທິດ, ແລະໃນເທສະການຢູ່ໄຟ,
ແລະພວກເຂົາຈະບໍ່ເຂົ້າເຝົ້າພຣະພັກພຣະຢາເວດ້ວຍມືເປົ່າ;[17]ແຕ່ຜູ້ຊາຍທຸກຄົນ, ຈະໃຫ້ຕາມທີ່ພວກເຂົາສາມາດໃຫ້ໄດ້,
ເພື່ອພວກທ່ານຈະຮູ້ພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ແກ່ພວກທ່ານ.
[18]ພວກທ່ານຕ້ອງຕັ້ງຜູ້ພິພາກສາແລະເຈົ້າຫນ້າທີ່ຕ່າງໆ
ພາຍໃນປະຕູເມືອງທັງຫມົດຂອງພວກທ່ານທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງປະທານໃຫ້ແກ່ພວກທ່ານ;
ແລະພວກເຂົາຕ້ອງພິພາກສາທຸກຄົນ, ດ້ວຍຄຳຕັດສິນທີ່ຊອບທັມ.[19]ພວກທ່ານຕ້ອງບໍ່ເອົາຄວາມຍຸຕິທັມອອກໄປດ້ວຍການບີບບັງຄັບ;
ພວກທ່ານບໍ່ຕ້ອງສະແດງຄວາມລຳອຽງຫລືຮັບສິນບົນ, ເພາະສິນບົນນັ້ນເຮັດໃຫ້ຕາຂອງພວກທ່ານມືດບອດໄປ
ແລະເຮັດໃຫ້ຖ້ອຍຄຳຂອງຄົນຊອບທັມບິດເບືອນ.[20]ພວກທ່ານຕ້ອງຕິດຕາມຄວາມຍຸຕິທັມເທົ່ານັ້ນ,
ເພື່ອພວກທ່ານຈະມີຊີວິດແລະຮັບມໍຣະດົກຄືດິນແດນທີ່ພຣະເຈົ້າຂອງພວກທ່ານຈະປະທານໃຫ້ແກ່ພວກທ່ານ.
[21]ພວກທ່ານຕ້ອງບໍ່ຕັ້ງເສົາອາຄານເພື່ອຕົນເອງ ບໍ່ວ່າເສົາໃດໆ,
ນອກເຫນືອຈາກແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງພວກທ່ານທີ່ພວກທ່ານຈະເຮັດໄວ້ສຳລັບພວກທ່ານເອງ.
[22]ທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຽດຊັງ.


generated on Tue Jun 17 19:01:42 2025

17 [1]ພວກທ່ານບໍ່ຖວາຍເຄື່ອງບູຊາເປັນງົວຫລືແກະທີ່ມີຕຳນິຫລືສິ່ງບໍ່ດີໃດໆ, ແດ່ພຣະຢາເວພຣະເຈົ້າຂອງພວກທ່ານ
ເພາະນັ້ນຈະເປັນທີ່ຫນ້າລັງກຽດຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ.

[2]ຖ້າຫາກພົບເຫັນຜູ້ຊາຍຫລືຍິງຄົນໃດໃນທ່າມກາງພວກທ່ານ, ຄືບັນດາປະຕູເມືອງທັງຫລາຍຂອງພວກທີ່ພຣະຢາເວພຣະເຈົ້າຂອງພວກທ່ານ,
ທີ່ເຮັດຊົ່ວໃນສາຍພຣະເນດພຣະຢາເວພຣະເຈົ້າຂອງພວກທ່ານແລະລະເມີດຕໍ່ພັນຍັດຂອງພຣະອົງ,[3]ຄົນທີ່ໄດ້ໄປແລະນະມັດສະການພະອື່ນໆ
ແລະກົ້ມກາບພະເຫລົ່ານັ້ນ, ບໍ່ວ່າຈະເປັນຕາເວັນ, ເດືອນ, ຫລືສິ່ງໃດທີ່ເປັນບໍລິວານທ້ອງຟ້າ. ສິ່ງໃດທີ່ໄດ້ຫ້າມເອົາໄວ້.
[4]ແລະພວກທ່ານໄດ້ຮັບການບອກກ່າວເລື່ອງນີ້, ຫລືພວກທ່ານໄດ້ຍິນເລື່ອງນີ້ແລ້ວ ພວກທ່ານຈຶ່ງຖາມຢ່າງລະອຽດ.
ຖ້າຫາກເປັນຄວາມຈິງແລະຖືກຕ້ອງແນ່ນອນແລ້ວວ່າມີສິ່ງທີ່ຫນ້າລັງກຽດເກີດຂຶ້ນໃນອິສະຣາເອນ, ນີ້ຄືສິ່ງທີ່ພວກທ່ານສົມຄວນຕ້ອງເຮັດ.
[5]ພວກທ່ານຕ້ອງນຳຜູ້ຊາຍຫລືຜູ້ຍິງຄົນນັ້ນ, ຄືຄົນທີ່ໄດ້ເຮັດສິ່ງຊົ່ວຮ້າຍນີ້, ມາຍັງປະຕູເມືອງທັງຫລາຍຂອງພວກທ່ານ
ແລະພວກທ່ານຕ້ອງເອົາກ້ອນຫີນດຶກໃສ່ໃຫ້ຜູ້ຍິງຄົນນັ້ນຕາຍ.[6]ໂດຍພະຍານສອງປາກ ຫລືພະຍານສາມປາກ ເຂົາຕ້ອງຕາຍ;
ແຕ່ໂດຍພະຍານປາກດຽວເຂົາບໍ່ຕ້ອງຖືກເຮັດໃຫ້ຕາຍ.[7]ໃຫ້ພວກພະຍານທີ່ເຫັນນັ້ນແກ່ວງຫີນໃສ່ລາວກ່ອນ,
ແລະຈາກນັ້ນຈຶ່ງເປັນປະຊາຊົນທັງຫມົດແກ່ວງໃສ່ຕາມທີ່ຫລັງ ແລະພວກທ່ານຈຶ່ງຈະກຳຈັດຄວາມຊົ່ວອອກໄປຈາກທ່າມກາງພວກທ່ານໄດ້.
[8]ຖ້າມີຄະດີທີ່ຍາກເກີນກວ່າທີ່ພວກທ່ານຈະຕັດສິນໄດ້,
ອາດເປັນຄຳຖາມເລື່ອງການຄາດຕະກຳໂດຍເຈດຕະນາຫລືຂ້າເລື່ອງສິດທິອັນຊອບທັມກັບບຸກຄົນຫນຶ່ງກັບອີກຄົນຫນຶ່ງ,
ຫລືຄຳຖາມເລື່ອງການທຳຮ້າຍຮ່າງກາຍ, ຫລືຄະດີອື່ນໆ, ຄະດີຕ່າງໆ, ທີ່ມີຄວາມຮຸນແຮງພາຍໃນປະຕູເມືອງທັງຫລາຍຂອງພວກທ່ານ.
ດັ່ງນັ້ນແລ້ວພວກທ່ານຈຶ່ງຂຶ້ນໄປຍັງສະຖານທີ່ ທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງເລືອກໃຫ້ເປັນສະຖານທີ່ນະມັດສະການຂອງພຣະອົງ.
[9]ພວກທ່ານຕ້ອງໄປຫາປະໂລຫິດ, ຜູ້ເປັນເຊື້ອສາຍຂອງຄົນເລວີ ແລະຜູ້ພິພາກສາກຳລັງເຮັດໃນເວລານັ້ນເພື່ອເພິ່ນຈະໄດ້ຕັດສິນຄວາມໃຫ້.
[10]ພວກທ່ານຈຶ່ງສະແຫວງຫາຄຳປຶກສາຂອງພວກເຂົາ
ແລະພວກເຂົາຈະໃຫ້ຄຳຕັດສິນກັບພວກທ່ານແລະພວກທ່ານຈະເຮັດຕາມກົດຫມາຍທີ່ໄດ້ໃຫ້ໄວ້ແກ່ພວກທ່ານໃນສະຖານທີ່
ທີ່ພຣະຢາເວຊົງເລືອກໃຫ້ພວກທ່ານເປັນສະຖານທີ່ນະມັດສະການຂອງພຣະອົງ,
ພວກທ່ານຈຶ່ງເອົາໃຈໃສ່ໃນສິ່ງທີ່ພວກເຂົາສັ່ງໃຫ້ພວກທ່ານເຮັດ.[11]ຈຶ່ງເຮັດຕາມກົດຫມາຍທີ່ພວກເຂົາສອນພວກທ່ານ,
ແລະເຮັດຕາມຄຳຕັດສິນທີ່ພວກເຂົາໃຫ້ແກ່ພວກທ່ານ, ຢ່າຫັນໄປທາງຂວາມືຫລືຊ້າຍມືຈາກສິ່ງທີ່ພວກເຂົາບອກພວກທ່ານ.
[12]ຄົນໃດກໍຕາມທີ່ຈອງຫອງ, ບໍ່ຟັງສຽງຂອງປະໂລຫິດ ຜູ້ທີ່ຢືນປະຕິບັດຕໍ່ພຣະພັກຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ຫລືບໍ່ຟັງສຽງຜູ້ພິພາກສາ ຄົນນັ້ນຈະຕ້ອງຕາຍ;
ພວກທ່ານຈຶ່ງກຳຈັດຄົນຊົ່ວອອກໄປຈາກອິສະຣາເອນ[13]ປະຊາຊົນທຸກຄົນຕ້ອງໄດ້ຍິນສຽງແລະຢຳເກງ, ແລະບໍ່ເຮັດຕົວຈອງຫອງອີກຕໍ່ໄປ.
[14]ເມື່ອພວກທ່ານໄດ້ມາເຖິງດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ປະທານໃຫ້ທ່ານ, ແລະເມື່ອພວກທ່ານຍຶດຄອງດິນແດນນັ້ນ,
ແລະເລີ່ມຕົ້ນອາໄສຢູ່ນັ້ນ, ແລະພວກທ່ານກ່າວວ່າ,'ເຮົາຈະຕັ້ງກະສັດປົກຄອງເຫນືອເຮົາ, ຄືກັບທຸກຊົນຊາດທີ່ລ້ອມຮອບເຮົາຢູ່'.
[15]ແລ້ວພວກທ່ານຈຶ່ງຕັ້ງໃຜບາງຄົນໃຫ້ເປັນກະສັດປົກຄອງເຫນືອເຮົາ ຄືຄົນທີ່ພຣະຢາເວຊົງເລືອກ.
ພວກທ່ານຕ້ອງຕັ້ງໃຜບາງຄົນຈາກພີ່ນ້ອງຂອງພວກທ່ານໃຫ້ເປັນກະສັດປົກຄອງເຫນືອພວກທ່ານ,
ພວກທ່ານຢ່າເອົາຄົນຕ່າງຊາດຜູ້ບໍ່ແມ່ນພີ່ນ້ອງຂອງພວກທ່ານ, ມາປົກຄອງເຫນືອພວກທ່ານ.
[16]ແຕ່ເຂົາຕ້ອງບໍ່ເພີ່ມຈຳນວນມ້າຂອງເຂົາເອງ, ຫລືເປັນເຫດໃຫ້ປະຊາຊົນຫັນກັບໄປອີຢິບ, ເພື່ອພວກເຂົາຈະໄດ້ມາເພີ່ມ
ເພາະພຣະຢາເວໄດ້ກ່າວກັບພວກເຂົາແລ້ວວ່າ, ພວກເຈົ້າຈຶ່ງຢ່າກັບໄປທາງນັ້ນອີກ.
[17]ເຂົາຕ້ອງບໍ່ມີເມຍຫລາຍຄົນສຳລັບຕົວເຂົາເອງເພື່ອວ່າໃຈຂອງເຂົາຈະບໍ່ຫັນອອກໄປ. ເຂົາຕ້ອງບໍ່ສະສົມເງິນແລະທອງຈຳນວນຫລາຍ.
[18]ເມື່ອເຂົານັ່ງບັນລັງອານາຈັກຂອງເຂົາ, ເຂົາຕ້ອງບັນທຶກສຳເນົາກົດຫມາຍນີ້ໃນຫນັງສືມ້ວນ,
ສຳລັບຕົວຂອງເຂົາເອງຄືກົດຫມາຍທີ່ຢູ່ຫນ້າຂອງປະໂລຫິດຜູ້ເປັນຄົນເລວີ.[19]ຫນັງສືມ້ວນນັ້ນຕ້ອງຢູ່ກັບເຂົາ,
ແລະເຂົາຕ້ອງອ່ານຫນັງສືທີ່ບັນທຶກມ້ວນນັ້ນທຸກວັນຕະຫລອດຊີວິດຂອງເຂົາ,
ເພື່ອວ່າເຂົາຈະຮຽນຮູ້ການຖວາຍກຽດແດ່ພຣະຢາເວພຣະເຈົ້າຂອງເຂົາ, ເຊັ່ນດຽວກັນເພື່ອຖືຮັກສາຖ້ອຍຄຳທັງຫມົດທີ່ເປັນກົດຫມາຍນີ້,
ແລະກົດບັນຍັດເຫລົ່ານີ້, ເພື່ອປະຕິບັດຕາມຖ້ອຍຄຳເຫລົ່ານີ້.
[20]ເຂົາຕ້ອງເຮັດສິ່ງນີ້ເພື່ອໃຈຂອງເຂົາຈະບໍ່ຄິດວ່າໃຈຂອງເຂົາດີກວ່າພີ່ນ້ອງຂອງເຂົາ, ເພື່ອເຂົາຈະບໍ່ຫັນກັບໄປຈາກບັນຍັດຕ່າງໆ
ໄປທາງຂວາມືຫລືທາງຊ້າຍມື; ເພື່ອຈຸດປະສົງໃນການມີຊີວິດຍືນຍາວໃນອານາຈັກຂອງເຂົາ, ເຂົາແລະລູກຫລານທັງຫລາຍຂອງເຂົາ,
ໃນທ່າມກາງອິສະຣາເອນ.

18 [1]ບັນດາປະໂລຫິດ, ຜູ້ທີ່ເປັນຄົນເລວີທັງຫລາຍ, ແລະເຜົ່າເລວີທັງຫມົດ,
ຈະບໍ່ໄດ້ຮັບສ່ວນແບ່ງຫລືຮັບບັນດາມໍຣະດົກຮ່ວມກັບຊາວອິສະຣາເອນ,
ພວກເຂົາຕ້ອງກິນຂອງຖວາຍບູຊາທັງຫລາຍຂອງພຣະຢາເວຊຶ່ງເຜົາດ້ວຍໄຟທີ່ເປັນດັ່ງມໍຣະດົກຂອງພວກເຂົາ.
[2]ພວກເຂົາຕ້ອງບໍ່ມີມໍຣະດົກໃນທ່າມກາງພີ່ນ້ອງພວກເຂົາ; ພຣະຢາເວເປັນມໍຣະດົກຂອງພວກເຂົາ, ດັ່ງທີ່ພຣະອົງໄດ້ກ່າວກັບເຂົາແລ້ວນັ້ນ.

[3]ສິ່ງນີ້ຈະເປັນສິ່ງທີ່ປະໂຣຫິດທັງຫລາຍສົມຄວນໄດ້ຮັບຈາກປະຊາຊົນ, ຈາກຄົນເຫລົ່ານັ້ນທີ່ຖວາຍບູຊາ ບໍ່ວ່າຈະເປັນງົວຫລືແກະ:
ພວກເຂົາຕ້ອງເອົາສ່ວນບາງສ່ວນແກ້ມສອງແກ້ມ, ແລະສ່ວນຕ່າງໆທີ່ເປັນອະໄວຍະວະພາຍໃນແກ່ປະໂລຫິດ.
[4]ຜົນທຳອິດຂອງພືດຜົນຂອງພວກທ່ານ, ຂອງເຫລົ້າອະງຸ່ນໃຫມ່ຂອງພວກທ່ານ, ແລະຂອງນ້ຳມັນຂອງພວກທ່ານ,
ແລະຂົນແກະທີ່ຕັດຄັ້ງແລກຂອງພວກທ່ານ, ພວກທ່ານຕ້ອງມອບໃຫ້ແກ່ພວກເຂົາ.
[5]ເພາະພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງເລືອກເຂົາອອກມາຈາກເຜົ່າຕ່າງໆ, ຂອງພວກທ່ານເພື່ອຢືນຂຶ້ນ
ປະຕິບັດໃນພຣະນາມຂອງພຣະຢາເວທັງຕົວເຂົາແລະລູກຊາຍທັງຫລາຍຂອງພວກເຂົາຕະຫລອດໄປເປັນນິດ.
[6]ຖ້າມີຄົນເລວີຄົນຫນຶ່ງຈາກເມືອງໃດໆ ຂອງພວກທ່ານອອກມາຈາກອິສະຣາເອນທັງຫມົດຈາກທີ່ ທີ່ເຂົາກຳລັງອາໄສຢູ່,
ແລະເຂົາມີຄວາມປາຖະຫນາຢ່າງສຸດໃຈທີ່ຈະມາຍັງສະຖານທີ່ພຣະຢາເວຊົງເລືອກນັ້ນ.
[7]ເຂົາຕ້ອງປະຕິບັດໃນພຣະນາມຂອງພຣະຢາເວພຣະເຈົ້າຂອງພວກເຂົາຄືກັບພວກພີ່ນ້ອງຂອງພວກເຂົາທັງຫມົດທີ່ເປັນຄົນເລວີເຮັດ,
ຄືຜູ້ທີ່ຢືນຢູ່ນັ້ນຕໍ່ພຣະພັກພຣະຢາເວ.[8]ພວກເຂົາຕ້ອງຮັບສ່ວນແບ່ງຢ່າງດຽວກັນໃນການກິນ,
ນອກເຫນືອຈາກສິ່ງທີ່ໄດ້ຈາກການຂາຍມໍຣະດົກຄອບຄົວຂອງເຂົານັ້ນ.
[9]ພວກທ່ານນຳເຂົ້າມາໃນດິນແດນຂອງພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ແກ່ພວກທ່ານ,
ພວກທ່ານຕ້ອງບໍ່ຮຽນເຮັດສິ່ງທີ່ຫນ້າລັງກຽດຂອງຊົນຊາດຕ່າງໆ ເຫລົ່ານັ້ນ.[10]ໃນທ່າມກາງພວກທ່ານ
ຈະຕ້ອງບໍ່ພົບຄົນໃດທີ່ເອົາລູກຊາຍແລະລູກຍິງຂອງເຂົາເຜົາໄຟ, ຕ້ອງບໍ່ພົບຄົນໃດທີ່ເປັນຄົນທຳນວາຍ, ເປັນຫມໍດູ, ຫລືເປັນຫມໍສະເຫນ່,
ຫລືເປັນຜໍມົດ, ຫມໍຜີ, ເປັນຫມໍພາຍ,[11]ເປັນທີ່ສື່ສານກັບຄົນຕາຍ, ຫລືເປັນຄົນທີ່ສື່ສານກັບວິນຍານຕ່າງໆ.
[12]ເພາະບໍ່ວ່າໃຜກໍຕາມທີ່ເຮັດສິ່ງເຫລົ່ານີ້ກໍເປັນທີ່ຫນ້າລັງກຽດຕໍ່ພຣະຢາເວ; ເພາະສິ່ງທີ່ຫນ້າລັງກຽດເຫລົ່ານີ້
ພຣະຢາເວພຣະເຈົ້າຂອງພວກທ່ານຈຶ່ງຂັບໄລ່ພວກທ່ານອອກໄປຕໍ່ຫນ້າຕໍ່ຕາພວກທ່ານ.
[13]ພວກທ່ານຈຶ່ງເປັນຄົນທີ່ປາສະຈາກຕຳນິຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານ.[14]ເພາະຊົນຊາດຕ່າງໆ
ເຫລົ່ານີ້ທີ່ພວກທ່ານຈະຂັບໄລ່ນັ້ນຟັງສຽງຂອງພວກຄົນທີ່ເປັນຄົນທຳນວາຍແລະຫມໍດູ; ແຕ່ສຳລັບພວກທ່ານ
ພຣະຢາເວພຣະເຈົ້າຂອງພວກທ່ານບໍ່ອະນຸຍາດໃຫ້ພວກທ່ານເຮັດແນວນັ້ນ.
[15]ພຣະຢາເວພຣະເຈົ້າຂອງພວກທ່ານຈະຍົກຊູຜູ້ເຜີຍພຣະວະຈະນະຄົນຫນຶ່ງຈາກທ່າມກາງພວກທ່ານ,
ຜູ້ຫນຶ່ງຈາກພວກພີ່ນ້ອງຂອງພວກທ່ານຄືກັບຂ້ານ້ອຍ, ພວກທ່ານຕ້ອງຟັງສຽງຂອງເຂົາ.
[16]ນີ້ແມ່ນສິ່ງທີ່ທ່ານໄດ້ຂໍຈາກພຣະຢາເວພຣະເຈົ້າຂອງພວກທ່ານທີ່ໂຮເຣັບໃນວັນແຫ່ງການຊຸມນຸມນັ້ນ, ກ່າວວ່າ,
'ຢ່າໃຫ້ພວກທ່ານໄດ້ຍິນສຽງພຣະຢາເວພຣະເຈົ້າຂອງເຮົາອີກ, ຫລືຢ່າໃຫ້ພວກເຮົາຕ້ອງເບິ່ງເຫັນໄຟອັນແຮງກ້ານີ້ອີກຕໍ່ໄປ,
ບໍ່ສະນັ້ນພວກເຮົາຈະຕາຍ'.
[17]ພຣະຢາເວໄດ້ກ່າວກັບພວກຂ້ານ້ອຍວ່າ,' ສິ່ງທີ່ພວກເຂົາໄດ້ເວົ້ານັ້ນກໍດີ.
[18]ເຮົາຈະຍົກຜູ້ເຜີຍພຣະວະຈະນະຄົນຫນຶ່ງເພື່ອພວກເຂົາຊຶ່ງມາຈາກທ່າມກາງພວກພີ່ນ້ອງຂອງພວກເຂົາ, ຜູ້ເປັນຄືເຈົ້າ.
ເຮົາຈະໃສ່ຖ້ອຍຄຳຂອງເຮົາໃນປາກຂອງເຂົາ, ແລະເຂົາຈະກ່າວຖ້ອຍຄຳເຫລົ່ານັ້ນທັງຫມົດທີ່ເຮົາໄດ້ບັນຊາແກ່ເຂົາ.
[19]ມັນຈະເກີດຂຶ້ນທີ່ມີບາງຄົນທີ່ບໍ່ຍອມຟັງຖ້ອຍຄຳຕ່າງໆ ຂອງເຮົາທີ່ກ່າວໂດຍນາມຂອງເຮົາທີ່ກ່າວໂດຍນາມຂອງເຮົາ, ເຮົາຈະກຳນົດໂທດຕໍ່ເຂົາ.
[20]ແຕ່ຜູ້ເຜີຍພຣະວະຈະນະທີ່ກ່າວຖ້ອຍຄຳຢ່າງຍະໂສໂອຫັງໃນນາມຂອງເຮົາ, ຖ້ອຍຄຳທີ່ເຮົາບໍ່ໄດ້ບັນຊາເຂົາໃຫ້ກ່າວ,
ຫລືຜູ້ທີ່ກ່າວໃນນາມຂອງພະອື່ນໆ, ຜູ້ເຜີຍພຣະວະຈະນະນັ້ນຈະຕ້ອງຕາຍ'.[21]ສິ່ງນີ້ຄືສິ່ງທີ່ພວກທ່ານຕ້ອງກ່າວໃນໃຈຂອງພວກທ່ານ:
'ພວກເຮົາຈະຈົດຈຳຖ້ອຍຄຳທີ່ພຣະຢາເວບໍ່ໄດ້ກ່າວໄດ້ແນວໃດ?'.
[22]ພວກທ່ານຈະຈົດຈຳຖ້ອຍຄຳທີ່ພຣະຢາເວໄດ້ກ່າວເມື່ອຜູ້ເຜີຍພຣະວະຈະນະກ່າວໃນນາມພຣະຢາເວ.
ຖ້າຫາກສິ່ງນັ້ນບໍ່ປະກົດຫລືເກີດຂຶ້ນແລ້ວ, ນັ້ນຍ່ອມເປັນສິ່ງທີ່ພຣະຢາເວບໍ່ໄດ້ກ່າວແລະຜູ້ເຜີຍພຣະວະຈະນະໄດ້ກ່າວສິ່ງນັ້ນຢ່າງຍະໂສໂອຫັງ
ແລະພວກທ່ານຈຶ່ງຢ່າເກງຢ້ານເຂົາ.

 generated on Tue Jun 17 19:01:42 2025

# 19

1ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານທຳລາຍຊົນຊາດຕ່າງໆ,
ຄືຄົນເຫລົ່ານັ້ນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານດິນແດນຂອງພວກເຂົາໃຫ້ແກ່ພວກທ່ານ,
ແລະເມື່ອພວກທ່ານຂັບໄລ່ພວກເຂົາແລະເຂົ້າອາໄສຢູ່ໃນບັນດາເມືອງແລະບ້ານເຮືອນຕ່າງໆ ຂອງພວກເຂົາ,
2ພວກທ່ານຈົ່ງເລືອກເມືອງສາມເມືອງສຳລັບພວກທ່ານເອງຊຶ່ງຢູ່ທາງກາງຂອງດິນແດນຂອງພວກທ່ານທີ່ພຣະຢາເວພຣະເຈົ້າຂອງ 3ພວກທ່ານກຳລັງຈະປະທານໃຫ້ພ
ພວກທ່ານຕ້ອງສ້າງຖະຫນົນສາຍຫນຶ່ງແລະແບ່ງເຂດແດນຕ່າງໆ, ໃນດິນແດນຂອງພວກທ່ານເປັນສາມສ່ວນ,
ດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ເປັນມໍຣະດົກ, ເພື່ອວ່າທຸກຄົນທີ່ຂ້າບຸກຄົນອື່ນຈະຫນີໄປທີ່ນັ້ນ.

4ນີ້ຄືກົດຫມາຍສຳລັບຄົນທີ່ຂ້າຄົນອື່ນແລະຫນີໄປອາໄສຢູ່ທີ່ນັ້ນ ຄື: ໃຜກໍຕາມທີ່ຂ້າເພື່ອນບ້ານໂດຍບໍ່ໄດ້ຕັ້ງໃຈ, ແລະບໍ່ໄດ້ຊັງເຂົາມາກ່ອນ.
5ເຊັ່ນເມື່ອຊາຍຄົນຫນຶ່ງເຂົ້າໄປໃນປ່າເພື່ອຕັດໄມ້ກັບເພື່ອນບ້ານຂອງເຂົາ,
ແລະມືຂອງເຂົາຈັບຂວານຂຶ້ນເພື່ອຈະຕັດຕົ້ນໄມ້ແລະຫົວຂວານນັ້ນຫລຸດອອກຈາກດ້າມແລະໄປຖືກເພື່ອນບ້ານຂອງເຂົາແລ້ວພວກເຂົາຈຶ່ງເສຍຊີວິດ.
ດັ່ງນັ້ນຊາຍຄົນນັ້ນຕ້ອງຫນີໄປເມືອງໃດເມືອງຫນຶ່ງໃນເມືອງເຫລົ່ານີ້-ແລ້ວອາໄສຢູ່ໃນເມືອງນັ້ນ.
6ບໍ່ເຊັ່ນນັ້ນຄົນທີ່ອາຄາດໂລຫິດຈະຕາມຄົນນັ້ນເພື່ອເອົາຊີວິດຂອງເຂົາຖ້າຫາກເມືອງນັ້ນໄກເກີນໄປ, ດ້ວຍຄວາມໂກດຮ້າຍທີ່ພຸ່ງຂຶ້ນ,
ເຂົາຈະທຳຮ້າຍແລະຂ້າຊາຍຄົນນັ້ນ, ແມ່ນວ່າຊາຍຄົນນັ້ນບໍ່ສົມຄວນຈະຕ້ອງຕາຍ, ເພາະເຂົາບໍ່ໄດ້ຊັງເພື່ອນບ້ານຂອງເຂົາມາກ່ອນ.
7ດ້ວຍເຫດນີ້ຂ້ານ້ອຍຈຶ່ງບັນຊາທ່ານໃຫ້ເລືອກເມືອງສາມເມືອງເພື່ອພວກທ່ານເອງ.
8ຖ້າພຣະຢາເວພຣະເຈົ້າຂອງພວກທ່ານຂະຫຍາຍເຂດແດນຂອງພວກທ່ານ,
ດັ່ງທີ່ພຣະອົງໄດ້ສັນຍາແກ່ບັນດາບັນພະບຸຣຸດຂອງພວກທ່ານໃຫ້ເຮັດ,
ແລະປະທານດິນແດນທັງຫມົດໃຫ້ແກ່ພວກທ່ານຕາມທີ່ໄດ້ຊົງສັນຍາໄວ້ວ່າຈະປະທານໃຫ້ບັນດາບັນພະບຸຣຸດຂອງພວກທ່ານ;
9ຖ້າພວກທ່ານຖືຮັກສາບັນຍັດທັງຫມົດເຫລົ່ານີ້ເພື່ອເຮັດຕາມ,
ທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້ຄືພຣະບັນຍັດໃຫ້ຮັກພຣະຢາເວພຣະເຈົ້າຂອງພວກທ່ານ.
ແລະທີ່ຈະດຳເນີນໃນທາງຂອງພຣະອົງສະເຫມີ, ແລ້ວພວກທ່ານຕ້ອງເພີ່ມເມືອງເຫລົ່ານີ້ທັງສາມເມືອງເພື່ອທ່ານເອງ,
ນອກເຫນືອຈາກສາມເມືອງເຫລົ່ານີ້. 10ຈົ່ງເຮັດສິ່ງນີ້ເພື່ອເປັນມໍຣະດົກ, ເພື່ອຈະບໍ່ໃຫ້ຄວາມຜິດເນື່ອງຈາກໂລຫິດຕົກຢູ່ນຳພວກທ່ານ.
11ແຕ່ຖ້າຄົນໃດຊັງເພື່ອນບ້ານຂອງເຂົາ, ຊຸ້ມຄອຍດັກເຂົາ ລຸກຂຶ້ນທຳຮ້າຍເຂົາ, ແລະຖ້າເຂົາຫນີໄປຍັງເມືອງໃດເມືອງຫນຶ່ງເຫລົ່ານີ້ແລ້ວ.
12ບັນດາຜູ້ໃຫຍ່ໃນເມືອງຂອງພວກເຂົາຕ້ອງສົ່ງຕົວແລະນຳເຂົາກັບມາທີ່ນັ້ນ, ແລະມອບເຂົາຄືນໃຫ້ກັບຍາດທີ່ມີຄວາມຮັບຜິດຊອບຕໍ່ເຂົາ,
ເພື່ອວ່າເຂົາຢ້ານຈະຖືກຂ້າຕາຍ. 13ດວງຕາຂອງພວກທ່ານຕ້ອງບໍ່ສະແດງຄວາມສົງສານແກ່ເຂົາ,
ແຕ່ພວກທ່ານຕ້ອງກຳຈັດຜູ້ທີ່ຈົງໃຈຂ້າຄົນຕາຍອອກໄປຈາກອິສະຣາເອນ, ເພື່ອພວກທ່ານຈະໄປດີມາດີ.
14ພວກທ່ານບໍ່ຍ້າຍຫລັກເຂດຂອງເພື່ອນບ້ານຂອງພວກທ່ານທີ່ພວກເຂົາໄດ້ຕັ້ງໃນສະຖານທີ່ເປັນເວລານານມາແລ້ວ,
ໃນມໍຣະດົກທີ່ພວກທ່ານຈະໄດ້ຮັບ, ໃນດິນແດນພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານໃຫ້ພວກທ່ານຍຶດຄອງ.
15ພະຍານປາກດຽວຕ້ອງບໍ່ລຸກຂຶ້ນປັກປຳຊາຍຄົນໃດໆ, ໃນເລື່ອງໃດໆ, ທີ່ເຂົາເຮັດບາບ,
ບໍ່ວ່າໃນເລື່ອງໃດຈະຕ້ອງໄດ້ຮັບການຢືນຢັນໂດຍພະຍານສອງປາກ, ຫລືພະຍານສາມປາກ.
16ສົມມຸດວ່າມີພະຍານບໍ່ຊອບທັມລຸກຂຶ້ນປັກປຳຊາຍຄົນໃດເພື່ອພິສູດຈົນເຖິງການເຮັດຜິດຂອງເຂົາ.
17ດັ່ງນັ້ນຊາຍທັງສອງ ຄືຄົນທີ່ກຳລັງມີຂໍ້ພິພາກຕໍ່ກັນນັ້ນ, ຈະຕ້ອງຢືນຢູ່ຕໍ່ຫນ້າພຣະພັກພຣະຢາເວ, ຕໍ່ຫນ້າປະໂລຫິດທັງຫລາຍ,
ແລະ 18ຜູ້ພິພາກສາທັງຫລາຍຕ້ອງເຮັດການໄຕ່ຕອງຢ່າງລະອຽດເບິ່ງວ່າພະຍານນັ້ນເຮັດແລະມີຫລັກຖານເຮັດເພື່ອປັກປຳພີ່ນ້ອງຂອງເຂົາຫລືບໍ່?
19ດັ່ງນັ້ນສິ່ງທີ່ພວກທ່ານຕ້ອງເຮັດແກ່ເຂົາຄື: ເຮັດໃນສິ່ງທີ່ເຂົາປາຖະຫນາເຮັດຕໍ່ພີ່ນ້ອງຂອງພວກເຂົາ,
ແລະພວກທ່ານຈະກຳຈັດຄົນຊົ່ວອອກໄປຈາກທ່າມກາງພວກທ່ານ.
20ແລ້ວບັນດາຄົນເຫລົ່ານັ້ນທີ່ເຫລືອຢູ່ຈະໄດ້ຍິນແລະເກງຢ້ານ, ແລະຈາກນັ້ນຈະບໍ່ມີການເຮັດສິ່ງຊົ່ວຮ້າຍໃນທ່າມກາງພວກທ່ານອີກ.
21ດວງຕາຂອງພວກທ່ານບໍ່ສະແດງຄວາມສົງສານ; ຊີວິດຕ້ອງແລກດ້ວຍຊີວິດ, ຕາແທນຕາ, ແຂ້ວແທນແຂ້ວ, ມືແທນມື, ຕີນແທນຕີນ.


generated on Tue Jun 17 19:01:42 2025

20 [1]ເມື່ອພວກທ່ານອອກຮົບຕໍ່ສູ້ເຫລົ່າສັດຕຣູຂອງພວກທ່ານ ແລະເບິ່ງເຫັນມ້າເສິກທັງຫລາຍ, ແລະຜູ້ທີ່ມີຈຳນວນຫລາຍກວ່າພວກທ່ານ,
ພວກທ່ານຈົ່ງຢ່າຢ້ານເຂົາ, ເພາະພຣະຢາເວພຣະເຈົ້າຂອງພວກທ່ານຊົງຢູ່ກັບພວກທ່ານ, ພຣະອົງໄດ້ນຳພວກທ່ານອອກມາຈາກອີຢິບ.

[2]ເມື່ອພວກທ່ານຈະເຂົ້າໄປໃນສົງຄາມປະໂລຫິດຕ້ອງເຂົ້າມາໃກ້ແລະເວົ້າກັບປະຊາຊົນ[3]ເຂົາຕ້ອງເວົ້າກັບພວກເຂົາວ່າ 'ອິສະຣາເອນຈົ່ງຟັງ,
ພວກທ່ານຈະເຂົ້າເຮັດສົງຄາມກັບສັດຕຣູຂອງພວກທ່ານ. ຈົ່ງຢ່າໃຫ້ທ່ານ ຢ່າຢ້ານກົວພວກເຂົາເລີຍ.
[4]ເພາະພຣະຢາເວພຣະເຈົ້າຂອງພວກທ່ານຊົງເປັນຜູ້ດຽວທີ່ໄປກັບພວກທ່ານເພື່ອຕໍ່ສູ້ສັດຕຣູແທນພວກທ່ານແລະເພື່ອຊ່ວຍເຫລືອພວກທ່ານໃຫ້ພົ້ນ'.
[5]ນາຍທະຫານທັງຫລາຍຕ້ອງເວົ້າກັບປະຊາຊົນແລະເວົ້າວ່າ, 'ມີຊາຍຄົນໃດທີ່ສ້າງບ້ານໃຫມ່ແລະຍັງບໍ່ໄດ້ຖວາຍບ້ານ?
ໃຫ້ເຂົາກັບໄປບ້ານຂອງພວກເຂົາ, ເພື່ອວ່າເຂົາຈະບໍ່ຕາຍໃນສົງຄາມແລະເຮັດໃຫ້ຄົນອື່ນຖວາຍບ້ານແທນ.
[6]ມີໃຜທີ່ປູກສວນອະງຸ່ນແລະຍັງບໍ່ໄດ້ເກັບກ່ຽວຜົນ? ໃຫ້ເຂົາກັບບ້ານ, ເພື່ອເຂົາຈະບໍ່ຕ້ອງຕາຍໃນສົງຄາມແລະໃຫ້ຄົນອື່ນເກັບກ່ຽວຜົນນັ້ນແທນ.
[7]ມີຊາຍຄົນໃດທີ່ໄດ້ຫມັ້ນຫມາຍກັບຜູ້ຍິງຄົນຫນຶ່ງແລະຍັງບໍ່ໄດ້ແຕ່ງງານກັບລາວ?
ໃຫ້ເຂົາກັບບ້ານເພື່ອວ່າເຂົາຈະບໍ່ຕາຍໃນສົງຄາມແລະເຮັດໃຫ້ຄົນອື່ນຕ້ອງແຕ່ງງານກັບລາວ'.
[8]ນາຍທະຫານທັງຫລາຍຕ້ອງເວົ້າເພີ່ມເຕີມກັບປະຊາຊົນອີກວ່າ,' ມີຊາຍຄົນໃດທີ່ຢ້ານຫລືສະເທືອນໃຈບໍ? ໃຫ້ເຂົາກັບໄປທີ່ບ້ານຂອງເຂົາ,
ເພື່ອວ່າໃຈຂອງພີ່ນ້ອງເຂົາຈະບໍ່ລະລາຍໄປກັບພີ່ນ້ອງຂອງເຂົາເອງ'.[9]ເມື່ອເຈົ້າຫນ້າທີ່ທັງຫລາຍໄດ້ກ່າວກັບປະຊາຊົນແລ້ວໆ,
ພວກເຂົາຕ້ອງແຕ່ງຕັ້ງຜູ້ບັນຊາການເຫນືອພວກເຂົາ.
[10]ເມື່ອພວກທ່ານອອກໄປໂຈມຕີເມືອງຫນຶ່ງ, ຈົ່ງໃຫ້ຂໍ້ສະເຫນີຍອມເຈລະຈາກັບຄົນເມືອງນັ້ນ.
[11]ຖ້າເຂົາຍອມຮັບຂໍ້ສະເຫນີຂອງພວກທ່ານແລະເປີດປະຕູເມືອງໃຫ້ແກ່ພວກທ່ານ
ປະຊາຊົນທຸກຄົນທີ່ຢູ່ໃນເມືອງນັ້ນຈະຕ້ອງເປັນທາດແຮງງານໃຫ້ແກ່ພວກທ່ານແລະຕ້ອງຮັບໃຊ້ພວກທ່ານ.
[12]ແຕ່ຖ້າບໍ່ມີການເຮັດຂໍ້ສະເຫນີຍອມເຈລະຈາພວກທ່ານ, ແຕ່ກັບເຮັດສົງຄາມກັບພວກທ່ານແລ້ວ ພວກທ່ານຕ້ອງລ້ອມເມືອງນັ້ນ,
[13]ແລະເມື່ອພຣະຢາເວພຣະເຈົ້າຂອງພວກທ່ານປະທານໄຊຊະນະແກ່ພວກທ່ານແລະໃຫ້ພວກເຂົາຢູ່ໃຕ້ການຄຸ້ມຄອງຈາກພວກທ່ານ,
ພວກທ່ານຕ້ອງຂ້າຜູ້ຊາຍຄົນໃນເມືອງນັ້ນ.
[14]ແຕ່ສຳລັບຜູ້ຍິງ ແລະເດັກນ້ອຍໆ, ທັງຫລາຍ ຝູງສັດ, ແລະທຸກສິ່ງທີ່ຢູ່ໃນເມືອງນັ້ນພວກທ່ານຈະຕ້ອງຍຶດມາເປັນຂອງຮົບເພື່ອທ່ານເອງ,
ພວກທ່ານຈະໃຊ້ສິ່ງຂອງທີ່ຍຶດມາໄດ້ຈາກສັດຕຣູຂອງພວກທ່ານໄດ້
ຄືພວກທ່ານພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ແກ່ພວກທ່ານ[15]ພວກທ່ານຕ້ອງເຮັດວິທີການນີ້ຕໍ່ເມືອງທີ່ຢູ່ໄກຈາກພວກທ່ານ,
ເມືອງຕ່າງໆ ທີ່ບໍ່ໄດ້ເປັນຂອງຊົນຊາດຕ່າງໆເຫລົ່ານີ້.
[16]ໃນເມືອງຕ່າງໆ ຂອງປະຊາຊົນເຫລົ່ານີ້ທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານໃຫ້ແກ່ພວກທ່ານເປັນມໍຣະດົກ,
ພວກທ່ານຕ້ອງບໍ່ປ່ອຍໃຫ້ສິ່ງໃດລອດຊີວິດ.[17]ແຕ່ພວກທ່ານຕ້ອງທຳລາຍພວກເຂົາໃຫ້ຫມົດ, ຄື ຊາວອາໂມໄຣ, ຊາວການາອານ, ຊາວເປຣີຊີ,
ຊາວຮີວີ, ແລະຊາວເຢບຸດ, ຕາມທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງບັນຊາພວກທ່ານນັ້ນ.
[18]ຈົ່ງເຮັດສິ່ງນີ້ເພື່ອວ່າພວກເຂົາຈະບໍ່ສອນພວກທ່ານໃຫ້ເຮັດວິທີທີ່ຫນ້າລັງກຽດຂອງພວກເຂົາ. ຄືກັບພວກເຂົາທີ່ໄດ້ເຮັດແກ່ພະຕ່າງໆ
ຂອງພວກເຂົານັ້ນ, ຖ້າຫາກພວກທ່ານເຮັດ ພວກທ່ານຈະເຮັດບາບຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ.
[19]ເມື່ອພວກທ່ານຈະລ້ອມຮອບເມືອງຫນຶ່ງເປັນເວລານານ, ຂະນະທີ່ພວກທ່ານເຮັດສົງຄາມເພື່ອຍຶດຄອງນັ້ນ,
ພວກທ່ານຕ້ອງບໍ່ທຳລາຍຕົ້ນໄມ້ຕ່າງໆ, ຂອງເມືອງນັ້ນໂດຍການໃຊ້ຂວານຕັດພວກມັນເພາະພວກທ່ານຕ້ອງກິນຜົນຈາກພວກມັນ.
ດັ່ງນັ້ນພວກທ່ານຕ້ອງບໍ່ຕັດມັນລົງ, ເພາະຕົ້ນໄມ້ທົ່ງນາເປັນຊີວິດຂອງມະນຸດທີ່ທ່ານລ້ອມຮອບຢູ່ນັ້ນແມ່ນຫລືບໍ່?[20]ມີພຽງຕົ້ນໄມ້ຕ່າງໆ
ທີ່ພວກທ່ານຮູ້ວ່າບໍ່ແມ່ນຕົ້ນໄມ້ທີ່ເປັນອາຫານ,
ພວກທ່ານສາມາດທຳລາຍແລະຕັດໄດ້ພວກທ່ານຈະສ້າງເຄື່ອງລ້ອມເມືອງເພື່ອຕໍ່ສູ້ກັບເມືອງນັ້ນທີ່ເຮັດສົງຄາມກັບພວກທ່ານ
ຈົນກວ່າເມືອງນັ້ນຈະແຕກ.


generated on Tue Jun 17 19:01:42 2025

# 21

[1]ຖ້າມີບາງຄົນຖືກຂ້າຕາຍໃນທົ່ງນາໃນດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງປະທານໃຫ້ແກ່ພວກທ່ານຄອບຄອງນັ້ນ,
ໂດຍບໍ່ຮູ້ວ່າໃຜເປັນຄົນຂ້າເຂົາແລ້ວ;[2]ບັນດາຜູ້ໃຫຍ່ຂອງພວກທ່ານແລະພວກຜູ້ພິພາກສາຕ້ອງອອກໄປ,
ແລະພວກເຂົາຕ້ອງວັດໄລຍະທາງເມືອງຕ່າງໆ ທີ່ຢູ່ລ້ອມຮອບຄົນນັ້ນທີ່ຖືກຂ້າ.

[3]ແລ້ວບັນດາຜູ້ໃຫຍ່ທີ່ຢູ່ໃກ້ເມືອງທີ່ມີຄົນຕາຍຫລາຍທີ່ສຸດ, ຕ້ອງນຳງົວສາວໂຕຫນຶ່ງມາຈາກຝູງ, ທີ່ເປັນງົວທີ່ບໍ່ຖືກໃຊ້ງານມາກ່ອນ.
[4]ແລ້ວພວກເຂົາຕ້ອງນຳງົວສາວໂຕນັ້ນມາທີ່ພູເຂົາແຫ່ງຫນຶ່ງທີ່ມີແມ່ນ້ຳໄຫລເປັນພູເຂົາທີ່ບໍ່ເຄີຍຖືກບຸກເບີກຫລືວ່ານເມັດມາກ່ອນ,
ແລະໃນພູເຂົານັ້ນພວກເຂົາຕ້ອງຫັກຄໍຂອງງົວສາວໂຕນັ້ນ.
[5]ພວກປະໂລຫິດ, ບັນດາເຊື້ອສາຍຂອງຄົນເລວີ, ຕ້ອງມາໃກ້
ຄືພວກເຂົາທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງເລືອກໃຫ້ປະຕິບັດພຣະອົງແລະອວຍພອນປະຊາຊົນໃນພຣະນາມຂອງພຣະຢາເວ;
ຈົ່ງຟັງຄຳຊີ້ແນະຂອງພວກເຂົາຈະເປັນຄຳຕັດສິນສຳຫລັບທຸກຂໍ້ພິພາກສາແລະສຳລັບການຮ້າຍທຸກຢ່າງ.
[6]ບັນດາຜູ້ໃຫຍ່ທັງຫມົດຂອງເມືອງນັ້ນທີ່ຢູ່ໃກ້ຄົນຖືກຂ້າຕາຍຕ້ອງຊຳລະມືຂອງພວກເຂົາເຫນືອງົວສາວໂຕນັ້ນທີ່ຖືກຫັກຄໍໃນພູເຂົາ;
[7]ແລະພວກເຂົາຕ້ອງຕອບໃນເລື່ອງນີ້ແລະເວົ້າວ່າ, 'ມືຂອງພວກເຮົາບໍ່ໄດ້ເຮັດໃຫ້ເລືອດນີ້ຕົກ ແລະດວງຕາຂອງເຮົາບໍ່ໄດ້ເບິ່ງເຫັນມັນ.
[8]ຂ້າແດ່ພຣະຢາເວ ຂໍຊົງໃຫ້ອະໄພຕໍ່ປະຊາຊົນອິສະຣາເອນຂອງພຣະອົງ, ຄືຜູ້ທີ່ພຣະອົງໄດ້ຊົງໄຖ່ມາ
ແລະຂໍຊົງຢ່າເອົາຜິດສຳລັບການຫລັ່ງເລືອດຂອງຜູ້ບໍ່ມີຄວາມຜິດໃນທ່າມກາງປະຊາຊົນອິສະຣາເອນຂອງພຣະອົງເລີຍ,
ແລ້ວການຫລັ່ງເລືອດນັ້ນຈະໄດ້ຮັບການຍົກໂທດ.[9]ດ້ວຍວິທີນີ້
ພວກທ່ານຈະເອົາການຫລັ່ງເລືອດຂອງຜູ້ທີ່ບໍ່ມີຄວາມຜິດອອກໄປຈາກທ່າມກາງພວກທ່ານ,
ເມື່ອພວກທ່ານເຮັດສິ່ງທີ່ຖືກຕ້ອງໃນສາຍພຣະເນດຂອງພຣະຢາເວ.
[10]ເມື່ອພວກທ່ານອອກໄປເຮັດສົງຄາມກັບສັດຕຣູຂອງພວກທ່ານແລະພຣະຢາເວພຣະເຈົ້າຂອງພວກທ່ານປະທານໄຊຊະນະແກ່ພວກທ່ານ,
ແລະເຮັດໃຫ້ພວກເຂົາຢູ່ພາຍໃຕ້ການຄວບຄຸມຂອງພວກທ່ານ, ແລະພວກທ່ານຈະເອົາພວກເຂົາມາເປັນຊະເລີຍ,
[11]ຖ້າພວກທ່ານເຫັນຜູ້ຍິງຄົນໃດທີ່ງາມໃນທ່າມກາງຊະເລີຍນັ້ນ,
ແລະະທ່ານມີຄວາມປາຖະຫນາຕໍ່ລາວແລະຕ້ອງເອົາລາວມາເປັນເມຍຂອງທ່ານເອງ,[12]ແລ້ວທ່ານຈະນຳລາວມາບ້ານຂອງທ່ານ;
ລາວຈະຕັດຜົມຂອງລາວແລະຕັດເລັບຂອງລາວ.
[13]ແລ້ວລາວຈະຖອດເສື້ອຜ້າທີ່ລາວສວມໃສ່ໃນຕອນທີ່ຖືກຈັບມາເປັນຊະເລີຍອອກ
ແລະລາວຈະອາໄສຢູ່ບ້ານຂອງທ່ານແລະລາວຈະໄວ້ທຸກເພື່ອພໍ່ແລະແມ່ຂອງລາວຕະຫລອດຫນຶ່ງເດືອນເຕັມ.
ຫລັງຈາກນັ້ນທ່ານຈະຫລັບນອນນຳລາວແລະເປັນສາມີຂອງລາວໄດ້, ແລະລາວຈະເປັນເມຍຂອງທ່ານ.[14]ແຕ່ຖ້າທ່ານບໍ່ພໍໃຈລາວແລ້ວ,
ທ່ານສາມາດປ່ອຍລາວໄປສະຖານທີ່ ທີ່ລາວປາຖະຫນາໄດ້, ແຕ່ທ່ານຕ້ອງບໍ່ຂາຍລາວເພື່ອແລກກັບເງິນຢ່າງເດັດຂາດ,
ແລະທ່ານບໍ່ຕ້ອງປະຕິບັດກັບລາວຄືກັບເປັນທາດ ເພາະທ່ານໄດ້ເຮັດໃຫ້ລາວເສຍກຽດຕິຍົດແລ້ວ.
[15]ຖ້າຫາກຜູ້ຊາຍຄົນໃດທີ່ມີເມຍຫນຶ່ງຄົນຫລືສອງຄົນເປັນທີ່ຮັກກັບອີກຄົນເປັນທີ່ກຽດຊັງ,
ແລະພວກນາງທັງສອງຄົນໄດ້ກຳເນີດລູກແກ່ເຂົາຄືທັງເມຍທີ່ເປັນທີ່ຮັກແລະເມຍທີ່ເປັນທີ່ກຽດຊັງ,
ຖ້າລູກຊາຍຄົນຫົວປີຂອງເມຍຄົນທີ່ຖືກກຽດຊັງ,[16]ແລ້ວໃນວັນທີ່ຜູ້ຊາຍຄົນນັ້ນເຮັດໃຫ້ລູກຊາຍຂອງເຂົາໄດ້ຮັບມໍຣະດົກທີ່ເຂົາຄອບຄອງ,
ເຂົາຕ້ອງບໍ່ເຮັດໃຫ້ລູກຊາຍຂອງເມຍທີ່ເປັນທີ່ຮັກເປັນລູກຫົວປີກ່ອນລູກຊາຍຂອງເມຍຄົນທີ່ເຂົາກຽດຊັງ, ຄືລູກຊາຍທີ່ເປັນລູກຫົວປີຢ່າງແທ້ຈິງ.
[17]ແຕ່ເຂົາຕ້ອງຍອມຮັບລູກຊາຍທີ່ເປັນຂອງເມຍທີ່ເຂົາກຽດຊັງນັ້ນ,
ໂດຍການມອບສ່ວນແບ່ງເປັນສອງເທົ່າຂອງທຸກສິ່ງທີ່ເຂົາຄອບຄອງແກ່ລູກຊາຍຄົນນັ້ນ;
ເພາະລູກຊາຍຄົນນັ້ນເປັນຈຸດເລີ່ມຕົ້ນຂອງກຳລັງຂອງເຂົາ; ສິດຂອງລູກຫົວປີຂອງພວກເຂົາ.
[18]ຖ້າຫາກຜູ້ຊາຍຄົນຫນຶ່ງມີລູກຊາຍດື້ຫລືກະບົດທີ່ບໍ່ຍອມຟັງສຽງຂອງພໍ່ເຂົາຫລືສຽງຂອງແມ່ຂອງເຂົາ, ເຖິງແມ່ນວ່າພວກເຂົາຈະຕັກເຕືອນ,
ລູກຊາຍກໍຈະບໍ່ຟັງສຽງຂອງພວກເຂົາ;
[19]ດັ່ງນັ້ນພໍ່ແລະແມ່ຂອງເຂົາຕ້ອງຈັບຕົວເຂົາແລະນຳອອກໄປຫາບັນດາຜູ້ໃຫຍ່ຂອງເມືອງຂອງເຂົາແລະໄປທີ່ປະຕູເມືອງຂອງເຂົາ.
[20]ພວກເຂົາຕ້ອງເວົ້າຕໍ່ບັນດາຜູ້ໃຫຍ່ຂອງເມືອງເຂົາວ່າ, 'ນີ້ແມ່ນລູກຊາຍຂອງເຮົາທີ່ດື້ແລະກະບົດ; ເຂົາຈະບໍ່ເຊື່ອຟັງສຽງຂອງເຮົາ;
ເຂົາເປັນຄົນດື້ດ້ານທັງບໍ່ຢູ່ໃນໂອວາດ'.[21]ແລ້ວຜູ້ຊາຍທຸກຄົນໃນເມືອງຂອງເຂົາຕ້ອງເອົາກ້ອນຫີນດຶກໃສ່ເຂົາໃຫ້ຕາຍ;
ແລະພວກທ່ານຈະກຳຈັດຄວາມຊົ່ວອອກໄປທ່າມກາງພວກທ່ານໄດ້. ຊາວອິສະຣາເອນທັງຫມົດຈະໄດ້ຍິນເລື່ອງນີ້ແລະເກງຢ້ານ.
[22]ຖ້າຫາກຜູ້ຊາຍຄົນຫນຶ່ງໄດ້ເຮັດບາບຊຶ່ງສົມຄວນຕາຍແລະເຂົາຖືກຂ້າຕາຍ, ແລະພວກທ່ານແຂວນເຂົາໄວ້ທີ່ຕົ້ນໄມ້ຕົ້ນຫນຶ່ງ,
[23]ແລ້ວສົບຂອງເຂົາຈະຕ້ອງບໍ່ຖືກປ່ອຍໃຫ້ຄ້າງຄືນເທິງຕົ້ນໄມ້ນັ້ນ. ແຕ່ພວກທ່ານ, ຕ້ອງເຜົາສົບຂອງເຂົາໃນວັນດຽວກັນນັ້ນ;
ເພາະໃຜກໍຕາມທີ່ຖືກແຂວນໄວ້ນັ້ນກໍໄດ້ຮັບຄຳສາບແຊ່ງໂດຍພຣະເຈົ້າ.
ຈົ່ງເຊື່ອຟັງຄຳບັນຊານີ້ເພື່ອວ່າພວກທ່ານຈະບໍ່ເຮັດໃຫ້ດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານໃຫ້ພວກທ່ານເປັນມໍຣະດົກນັ້ນເປັນມົນທິນ.


generated on Tue Jun 17 19:01:42 2025

# 22

1ພວກທ່ານຕ້ອງບໍ່ເບິ່ງງົວຂອງອິສະຣາເອນຫລືແກະຂອງເຂົາທີ່ຫລົງແລະເສີຍໆກັບພວກມັນ; ພວກທ່ານຕ້ອງນຳພວກມັນກັບຄືນໃຫ້ເຂົາ.
2ຖ້າຫາກຫມູ່ຊາວອິສະຣາເອນຂອງພວກທ່ານບໍ່ໄດ້ຢູ່ໃກ້ພວກທ່ານ, ຫລືຖ້າພວກທ່ານບໍ່ຮູ້ຈັກເຂົາ
ແລ້ວພວກທ່ານຕ້ອງນຳສັດນັ້ນກັບມາທີ່ບ້ານຂອງພວກທ່ານ, ແລະມັນຕ້ອງຢູ່ກັບພວກທ່ານຈົນກວ່າເຂົາຈະມາຕາມຫາມັນ
ແລະຈາກນັ້ນພວກທ່ານຕ້ອງຄືນໃຫ້ແກ່ເຂົາ.

3ພວກທ່ານຕ້ອງເຮັດຢ່າງດຽວກັນນີ້ກັບລວາຂອງພວກເຂົາ; ພວກທ່ານຕ້ອງເຮັດຢ່າງດຽວກັນນີ້ກັບເສື້ອຜ້າຂອງພວກເຂົາ,
ພວກທ່ານຕ້ອງເຮັດຢ່າງດຽວກັນນີ້ກັບເພື່ອນບ້ານອິສະຣາເອນຂອງພວກທ່ານເຮັດຕົກເຮ່ຍ ສິ່ງທີ່ເຂົາໄດ້ເຮັດຕົກເຮ່ຍ;
ແລະພວກທ່ານໄດ້ພົບພວກທ່ານຕ້ອງເຮັດເສີຍ. 4ພວກທ່ານຕ້ອງບໍ່ເບິ່ງລວາຂອງອິສະຣາເອນຂອງພວກທ່ານຫລືງົວຂອງເຂົາຕົກໄປຈາກຫົນທາງ
ແລະເສີຍຕໍ່ພວກມັນ; ພວກທ່ານຕ້ອງຊ່ວຍເຂົາເອົາມັນຂຶ້ນມາອີກຄັ້ງ.
5ຜູ້ຍິງຕ້ອງບໍ່ໃສ່ເຄື່ອງແຕ່ງກາຍຂອງຜູ້ຊາຍ, ແລະຜູ້ຊາຍກໍບໍ່ຕ້ອງໃສ່ເຄື່ອງແຕ່ງກາຍຜູ້ຍິງ;
ເພາະໃຜທີ່ເຮັດສິ່ງເຫລົ່ານີ້ກໍເປັນທີ່ຫນ້າລັງກຽດຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ.
6ຖ້າມີຮັງນົກຕົກຢູ່ຕໍ່ຫນ້າຕໍ່ຕາພວກທ່ານຢູ່ຫົນທາງ, ໃນຕົ້ນໄມ້ຕົ້ນໃດ, ຫລືຢູ່ພື້ນດິນຊຶ່ງຢູ່ຮັງນົກມີລູກນົກນ້ອຍໆ, ຫລືໄຂ່ນົກ,
ແລະແມ່ຂອງມັນນັ່ງປົກລູກຂອງມັນຢູ່ຫລືໄຂ່ນົກນັ້ນ, ພວກທ່ານຕ້ອງບໍ່ພາກແມ່ໄປຈາກລູກນ້ອຍໆ ຂອງມັນ.
7ພວກທ່ານຕ້ອງປ່ອຍແມ່ຂອງມັນໄປ, ແຕ່ລູກນ້ອຍໆຂອງມັນ ທ່ານສາມາດເອົາມາໄດ້. ຈົ່ງເຊື່ອຟັງຄືບັນຊານີ້ເພື່ອພວກທ່ານຈະໄປດີມາດີ,
ແລະພວກທ່ານຈະມີຊີວິດຍືນຍາວຕະຫລອດວັນເວລາຂອງພວກທ່ານ.
8ເມື່ອພວກທ່ານສ້າງບ້ານຫລັງໃຫມ່, ແລ້ວພວກທ່ານຕ້ອງເຮັດຮາວບັນໄດຂຶ້ນໄປເທິງຫລັງຄາຂອງພວກທ່ານ
ເພື່ອພວກທ່ານຈະບໍ່ເຮັດໃຫ້ເລືອດໄຫລເທິງຫລັງຄາບ້ານຂອງພວກທ່ານຖ້າຫາກມີໃຜຕົກລົງມາຈາກທີ່ນັ້ນ.
9ພວກທ່ານຕ້ອງບໍ່ເຮັດສວນອະງຸ່ນດ້ວຍການຫວ່ານເມັດພັນສອງຊະນິດພ້ອມກັນ,
ເພື່ອການເກັບກ່ຽວທັງຫມົດນັ້ນຈະບໍ່ເປັນມົນທິນຕໍ່ສະຖານທີ່ນັ້ນ, ຄືເມັດພັນທີ່ພວກທ່ານໄດ້ຫວ່ານແລະຜົນຜະລິດຈາກສວນອະງຸ່ນນັ້ນ.
10ພວກທ່ານຕ້ອງບໍ່ໃຊ້ງົວແລະລວາໄຖພວນດ້ວຍກັນ. 11ພວກທ່ານຕ້ອງບໍ່ໃສ່ເສື້ອຜ້າທີ່ເຮັດດ້ວຍຂົນແກະແລະຜ້າລີນິນເຂົ້າດ້ວຍກັນ.
12ພວກທ່ານຕ້ອງເຮັດພູ່ຫ້ອຍເອົາໄວ້ທີ່ມຸມທັງສີ່ດ້ານຂອງເສື້ອຄຸມທີ່ພວກເຈົ້າສວມໃສ່.
13ຖ້າມີຊາຍຄົນຫນຶ່ງກັບເມຍຄົນຫນຶ່ງ, ຫລັບນອນກັບນາງ, ແລະຈາກນັ້ນກໍກຽດຊັງລາວ,
14ແລະຈາກນັ້ນກໍກ່າວຫາເຮັດໃຫ້ລາວອັບອາຍແລະເຮັດໃຫ້ລາວເສຍຊື່ສຽງແລະເວົ້າວ່າ, 'ຂ້ານ້ອຍຮັບເອົາຜູ້ຍິງຄົນນີ້ມາ
ແຕ່ເມື່ອຂ້ານ້ອຍເຂົ້າໃກ້ລາວ, ຂ້ານ້ອຍພົບວ່າລາວບໍ່ແມ່ນຍິງບໍຣິສຸດ'.
15ແລ້ວພໍ່ແລະແມ່ຂອງຍິງສາວຄົນນັ້ນຕ້ອງພິສູດຄວາມບໍຣິສຸດຂອງຍິງສາວຕໍ່ບັນດາຜູ້ໃຫຍ່ທີ່ປະຕູເມືອງ.
16ພໍ່ຂອງຍິງສາວນັ້ນຕ້ອງເວົ້າຕໍ່ບັນດາຜູ້ໃຫຍ່ວ່າ, 'ຂ້ານ້ອຍໄດ້ມອບລູກສາວຂອງຂ້ານ້ອຍໃຫ້ຊາຍຄົນນີ້ເພື່ອເປັນພັນລະຍາ
ແລະເຂົາກໍກຽດຊັງລາວ. 17ເບິ່ງສາ, ເຂົາໄດ້ເວົ້າໃຫ້ລາວອັບອາຍແລະເວົ້າວ່າ,
"ຂ້ານ້ອຍພົບວ່າລູກສາວຂອງທ່ານບໍ່ແມ່ນຍິງບໍຣິສຸດຂອງລູກສາວຂອງຂ້ານ້ອຍ.'
ແລ້ວພວກເຂົາຈະຄືນເສື້ອຜ້ານັ້ນ'ອອກຕໍ່ຫນ້າຂອງບັນດາຜູ້ໃຫຍ່ຂອງເມືອງນັ້ນ.
18ບັນດາຜູ້ປົກຄອງເມືອງຕ້ອງນຳຕົວຂອງຜູ້ຊາຍນັ້ນມາແລະລົງໂທດເຂົາ ແລະພວກເຂົາຕ້ອງປັບເງິນຊາຍຄົນນັ້ນຈຳນວນຫນຶ່ງຮ້ອຍຫລຽນ;
19ແລະມອບເງິນນັ້ນໃຫ້ພໍ່ຂອງຍິງສາວຄົນນັ້ນເພາະຊາຍຄົນນັ້ນໄດ້ເຮັດໃຫ້ເສຍຊື່ສຽງເລື່ອງບໍຣິສຸດຂອງຄົນອິສະຣາເອນ.
ນາງຕ້ອງເປັນເມຍຂອງເຂົາ; ເຂົາບໍ່ສາມາດສົ່ງນາງໄປທີ່ໃດໄດ້ຕະຫລອດຊີວິດຂອງເຂົາ.
20ແຕ່ຖ້າສິ່ງນີ້ເປັນເລື່ອງຈິງທີ່ພິສູດໄດ້ວ່າ, ຍິງສາວຄົນນັ້ນບໍ່ ບໍຣິສຸດ, 21ແລ້ວພວກເຂົາຕ້ອງນຳຍິງຄົນນັ້ນມາທີ່ປະຕູບ້ານພໍ່ຂອງນາງ,
ແລະພວກຜູ້ຊາຍຕ້ອງເອົາຂີ້ຫີນດຶກໃສ່ລາວໃຫ້ຕາຍ, ເພາະລາວໄດ້ປະພຶດຢ່າງຫນ້າອັບອາຍໃນອິສະຣາເອນ,
ເຮັດໂສເພນີໃນບ້ານຂອງພໍ່ຂອງນາງ; ແລະພວກທ່ານຈະກຳຈັດຄວາມຊົ່ວອອກໄປຈາກທ່າມກາງພວກທ່ານ.
22ຖ້າຫາກມີຜູ້ຊາຍຄົນຫນຶ່ງທີ່ຖືກຈັບໄດ້ວ່າໄປຫລັບນອນກັບຜູ້ຍິງຄົນຫນຶ່ງທີ່ໄດ້ແຕ່ງງານກັບຜູ້ຊາຍອີກຄົນແລ້ວ, ພວກເຂົາຕ້ອງຕາຍທັງຄູ່,
ຄືຜູ້ຊາຍຄົນນັ້ນທີ່ກຳລັງຫລັບນອນກັບຜູ້ຍິງຄົນນັ້ນກັບຊາຍຄົນນັ້ນແລະຜູ້ຍິງຄົນນັ້ນເອງດ້ວຍ;
ແລະພວກທ່ານຈະກຳຈັດຄວາມຊົ່ວນັ້ນອອກໄປຈາກທ່າມກາງພວກທ່ານ.
23ຖ້າຫາກມີຍິງສາວຄົນຫນຶ່ງທີ່ເປັນຍິງບໍຣິສຸດ, ໄດ້ຫມັ້ນກັບຊາຍຄົນຫນຶ່ງ, ແລະມີຊາຍອີກຄົນຫນຶ່ງພົບເຫັນນາງໃນເມືອງແລະນອນກັບນາງ,
24ຈົ່ງນຳພວກເຂົາທັງສອງຄົນມາທີ່ປະຕູເມືອງ, ແລະເອົາກ້ອນຫີນດຶກໃສ່ເຂົາໃຫ້ຕາຍ. ພວກທ່ານຕ້ອງເອົາຫີນດຶກໃສ່ຍິງຄົນນັ້ນ,
ເພາະນາງໄດ້ສົ່ງສຽງຮ້ອງ, ແມ່ນວ່ານາງຢູ່ເມືອງນັ້ນພວກທ່ານຕ້ອງເອົາກ້ອນຫີນດຶກໃສ່ຊາຍຄົນນັ້ນ,
ເພາະເຂົາຂົ່ມຂືນເມຍຂອງເພື່ອນບ້ານຂອງເຂົາ; ແລະພວກທ່ານຈະກຳຈັດຄວາມຊົ່ວອອກໄປຈາກທ່າມກາງພວກທ່ານ.
25ແຕ່ຖ້າຊາຍຄົນນັ້ນພົບຍິງສາວຄົນນັ້ນໃນທົ່ງນາ, ແລະຖ້າຫາກເຂົາກຸມນາງແລະຫລັບນອນກັບນາງຈະຕ້ອງຕາຍພຽງຄົນດຽວ.
26ແຕ່ພວກທ່ານບໍ່ຕ້ອງເຮັດສິ່ງໃດກັບຍິງສາວຄົນນັ້ນ; ບໍ່ມີຄວາມບາບທີ່ສົມຄວນຕາຍກັບຍິງນັ້ນ.
ເພາະກໍລະນີນີ້ເປັນເຫມືອນຊາຍຄົນຫນຶ່ງໄດ້ທຳຮ້າຍເພື່ອນບ້ານຂອງເຂົາແລະຂ້າເຂົາ. 27ເພາະເຂົາໄດ້ພົບນາງໃນທົ່ງນາ
ຍິງສາວທີ່ຫມັ້ນແລ້ວໄດ້ສົ່ງສຽງຮ້ອງ; ແຕ່ບໍ່ມີໃຜຊ່ວຍນາງໃຫ້ລອດພົ້ນໄດ້.
28ຖ້າຫາກຊາຍຄົນຫນຶ່ງພົບຍິງສາວຄົນຫນຶ່ງທີ່ເປັນສາວບໍຣິສຸດແຕ່ຍັງບໍ່ໄດ້ຫມັ້ນ, ແລະຖ້າເຂົາຈັບກຸມນາງແລະຫລັບນອນກັບນາງ,
ແລະຖ້າພວກເຂົາຖືກຈັບໄດ້, 29ແລ້ວຜູ້ຊາຍຄົນນັ້ນທີ່ໄດ້ຫລັບນອນກັບນາງຕ້ອງໃຫ້ເງິນຫ້າສິບເຊເຂກັບພໍ່ຍິງສາວຄົນນັ້ນ,
ແລະນາງຕ້ອງເປັນພັນລະຍາຂອງເຂົາ, ເພາະເຂົາໄດ້ເຮັດໃຫ້ນາງເສຍກຽດຕິຍົດ. ເຂົາຕ້ອງບໍ່ໄລ່ນາງໄປຈົນຕະຫລອດຊີວິດຂອງເຂົາ.
30ຜູ້ຊາຍຄົນຫນຶ່ງຕ້ອງບໍ່ເອົາພັນລະຍາຂອງພໍ່ຂອງເຂົາມາເປັນພັນລະຍາຂອງເຂົາເອງ; ເຂົາຕ້ອງບໍ່ເອົາສິດທິໃນການແຕ່ງງານຂອງພໍ່ຂອງເຂົາໄປ.

 generated on Tue Jun 17 19:01:42 2025

# 23

[1]ຕ້ອງບໍ່ມີຜູ້ຊາຍຄົນໃດຖືກໂດຍການຖືກຕອນອະໄວຍະວະເພດຈະເຂົ້າໄປໃນທີ່ຊຸມນຸມຂອງພຣະຢາເວ.
[2]ຕ້ອງບໍ່ມີລູກນອກກົດຫມາຍຄົນໃດມີສ່ວນຮ່ວມໃນທີ່ຊຸມນຸມຂອງພຣະຢາເວ; ໄປຈົນເຖິງຊົນຮຸ້ນທີສິບຂອງເຊື້ອສາຍຂອງເຂົາ,
ໃນທ່າມກາງພວກເຂົາຈະບໍ່ມີແມ່ນແຕ່ຄົນດຽວທີ່ມີສ່ວນຮ່ວມໃນທີ່ຊຸມນຸມຂອງພຣະຢາເວ.

[3]ຄົນອຳໂມນຫລືຄົນໂມອາບຈະບໍ່ສາມາດມີສ່ວນຮ່ວມໃນທີ່ຊຸມນຸມຂອງພຣະຢາເວ; ໄປຈົນເຖິງຄົນຮຸ້ນທີສິບຂອງເຊື້ອສາຍຂອງເຂົາ,
ໃນທ່າມກາງຂອງພວກເຂົາບໍ່ມີແມ່ນແຕ່ຄົນດຽວທີ່ມີສ່ວນຮ່ວມໃນທີ່ຊຸມນຸມຂອງພຣະຢາເວໄດ້.
[4]ນີ້ເພາະພວກເຂົາບໍ່ໄດ້ຕ້ອນຮັບພວກທ່ານດ້ວຍເຂົ້າຈີ່ແລະນ້ຳດື່ມຕາມທາງເມື່ອພວກທ່ານໄດ້ອອກມາຈາກອີຢິບ, ແລະພວກເຂົາໄດ້ວ່າຈ້າງ
ບາລາອາມລູກຊາຍເບອໍ ຈາກ ເປໂທໃນອາຣາມ ນາຮາອິມ, ໃຫ້ມາສາບແຊ່ງພວກທ່ານ.
[5]ແຕ່ພຣະຢາເວພຣະເຈົ້າຂອງພວກທ່ານບໍ່ໄດ້ຟັງສຽງ ບາຣາອາມ;
ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ປ່ຽນຄຳສາບແຊ່ງເປັນພຣະພອນສຳລັບພວກທ່ານແທນ,
ເພາະພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງຮັກພວກທ່ານ.
[6]ພວກທ່ານຕ້ອງບໍ່ສະແຫວງຫາສັນຕິສຸກຫລືຄວາມຈະເລີນຮຸ່ງເຮືອງຂອງພວກເຂົາ ໃນຕະຫລອດຊີວິດຂອງພວກທ່ານ.
[7]ພວກທ່ານຕ້ອງບໍ່ກຽດຊັງຄົນເອໂດມ, ເພາະເຂົາເປັນພີ່ນ້ອງຂອງພວກທ່ານ, ພວກທ່ານຕ້ອງບໍ່ຊັງຄົນເອຢິບ,
ເພາະເຫດພວກທ່ານເຄີຍເປັນຄົນຕ່າງຊາດໃນດິນແດນຂອງເຂົາມາກ່ອນ.
[8]ເຊື້ອສາຍຂອງຊົນລຮຸ້ນທີສາມທີ່ຖືກຳເນີດຈາກພວກເຂົາຈະສາມາດມີສ່ວນຮ່ວມໃນທີ່ປະຊຸມຂອງພຣະຢາເວໄດ້.
[9]ເມື່ອພວກທ່ານຕັ້ງຂະບວນກອງທັບເພື່ອຕໍ່ສູ້ສັດຕຣູຂອງພວກທ່ານ, ດັ່ງນັ້ນພວກທ່ານຕ້ອງຮັກສາໂຕເອງໃຫ້ພົ້ນຈາກສິ່ງຊົ່ວຮ້າຍທຸກຢ່າງ.
[10]ຖ້າໃນທ່າມກາງພວກທ່ານມີຜູ້ຊາຍຄົນໃດທີ່ເປັນມົນທິນເພາະສິ່ງທີ່ເກີດຂຶ້ນກັບເຂົາໃນເວລາກາງຄືນແລ້ວ,
ເຂົາຕ້ອງອອກໄປຈາກຄ້າຍຂອງກອງພົນນັ້ນ; ເຂົາຕ້ອງບໍ່ກັບເຂົ້າມາໃນຄ້າຍອີກ.[11]ເມື່ອຮອດຕອນແລງເຂົາຕ້ອງຊຳລະໂຕໃຫ້ສະອາດດ້ວຍນ້ຳ,
ເມື່ອດວງອາທິດຕົກ ເຂົາຈຶ່ງຈະກັບເຂົ້າມາໃນຄ້າຍໄດ້.
[12]ພວກທ່ານຕ້ອງມີສະຖານທີ່ແຫ່ງຫນຶ່ງພາຍນອກຄ້າຍທີ່ພວກທ່ານຈະໄປໄດ້ດ້ວຍ;
[13]ແລະພວກທ່ານຈະມີອຸປະກອນບາງຢ່າງໃນທ່າມກາງອຸປະກອນຕ່າງໆ; ຂອງພວກທ່ານເພື່ອໃຊ້ຂຸດດິນ
ເມື່ອພວກທ່ານນັ່ງຢ່ອງຢັ້ລົງເພື່ອນັ່ງຖ່າຍດ້ວຍຕົວເອງ, ພວກທ່ານຕ້ອງຂຸດດິນດ້ວຍອຸປະກອນນັ້ນແລະຈາກນັ້ນໃຫ້ຖົມດິນ.
[14]ເພາະພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງດຳເນີນໃນທ່າມກາງພວກທ່ານດ້ວຍເຫດນີ້ຄ້າຍຂອງທ່ານຕ້ອງບໍຣິສຸດ.
ເພື່ອພຣະອົງຈະຊົງທອດພຣະເນດເຫັນສິ່ງທີ່ເປັນມົນທິນໃດໆ ໃນທ່າມກາງພວກທ່ານແລະຫັນຫນີຈາກພວກທ່ານ.
[15]ພວກທ່ານຕ້ອງບໍ່ມອບທາດຄົນໃດຄົນຫນຶ່ງຫນີມາຈາກເຈົ້ານາຍຂອງເຂົາໃຫ້ແກ່ເຈົ້ານາຍຂອງເຂົາ.[16]ຈົ່ງຍອມໃຫ້ເຂົາອາໄສຢູ່ກັບພວກທ່ານ,
ບໍ່ວ່າເມືອງໃດທີ່ເຂົາເລືອກຢ່າກົດຂີ່ເຂົາ.
[17]ຕ້ອງບໍ່ມີຍິງໂສເພນີສາດສະຫນາໃນທ່າມກາງລູກຍິງທັງຫລາຍຂອງອິສະຣາເອນ,
ແລະບໍ່ມີຍິງໂສເພນີໃນພິທີສາດສະຫນາໃນທ່າມກາງລູກຊາຍທັງຫລາຍຂອງອິສະຣາເອນ.
[18]ພວກທ່ານຕ້ອງບໍ່ນຳຄ່າຈ້າງຂອງໂສເພນີຫລືຄ່າຈ້າງຂອງຫມາເຂົ້າມາໃນນິເວດຂອງພຣະຢາເວພຣະເຈົ້າຂອງພວກທ່ານ;
ເພາະສິ່ງນີ້ເປັນທີ່ຫນ້າລັງກຽດຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ.
[19]ພວກທ່ານຕ້ອງບໍ່ຄິດດອກເບ້ຍຕໍ່ພີ່ນ້ອງຊາວອິສະຣາເອນ- ບໍ່ວ່າດອກເບ້ຍເງິນ, ດອກເບ້ຍອາຫານ, ດອກເບ້ຍສິ່ງຂອງໃດໆ,
ທີ່ໃຫ້ຢືມເພື່ອເອົາດອກເບ້ຍ, ແລະພວກທ່ານໃຫ້ຢືມເພື່ອຄິດດອກເບ້ຍໄດ້.[20]ຕໍ່ຄົນຕ່າງຊາດພວກທ່ານສາມາດເກັບດອກເບ້ຍໄດ້;
ພວກທ່ານໃຫ້ຢືມໂດຍບໍ່ຄິດດອກເບ້ຍຕໍ່ພີ່ນ້ອງອິສະຣາເອນໄດ້, ເພື່ອວ່າພຣະຢາເວຂອງພວກທ່ານຈະຊົງອວຍພອນພວກທ່ານໃນທຸກສິ່ງ,
ທີ່ມືຂອງພວກທ່ານເຮັດ, ໃນດິນແດນນັ້ນທີ່ພວກທ່ານເຂົ້າໄປຢຶດຄອງ.
[21]ເມື່ອພວກທ່ານໃຫ້ຄຳສາບານຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ, ພວກທ່ານຕ້ອງບໍ່ຊ້າໃນການເຮັດໃຫ້ຄຳສາບານນັ້ນສຳເລັດ,
ເພາະພຣະຢາເວຂອງພວກທ່ານ; ຈະຮຽກຮ້ອງສິ່ງນັ້ນຈາກພວກທ່ານແນ່ນອນ.[22]ຖ້າບໍ່ເຮັດໃຫ້ຄຳສາບານສຳເລັດກໍ່ບາບແກ່ພວກທ່ານ.
[23]ສິ່ງນັ້ນທີ່ໄດ້ອອກມາຈາກປາກຂອງພວກທ່ານ ພວກທ່ານຕ້ອງປະຕິບັດແລະເຮັດຕາມ;
ຄືສິ່ງທີ່ພວກທ່ານໄດ້ໃຫ້ຄຳສາບານເອົາໄວ້ຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ,
ສິ່ງໃດໆກໍ່ຕາມທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ່ສັນຍາດ້ວຍປາກຂອງພວກທ່ານໂດຍສະມັກໃຈ.
[24]ເມື່ອພວກທ່ານເຂົ້າໄປໃນສວນອະງຸ່ນຂອງເພື່ອນບ້ານຂອງພວກທ່ານ,
ພວກທ່ານສາມາດຮັບປະທານຜົນຂອງອະງຸ່ນໄດ້ຕາມທີ່ພວກທ່ານປາຖະຫນາ, ແຕ່ຢ່າເກັບຜົນອະງຸ່ນໃສ່ກະຕ່າຂອງພວກທ່ານ.
[25]ເມື່ອພວກທ່ານເຂົ້າໄປໃນທົ່ງນາຂອງເພື່ອນບ້ານຂອງພວກທ່ານ, ພວກທ່ານສາມາດໃຊ້ມືຂອງພວກທ່ານເດັດຮວງເຂົ້າ, ແຕ່ຫ້າມໃຊ້ກ່ຽວ
ກ່ຽວຮວງເຂົ້າຂອງເພື່ອນບ້ານຂອງພວກທ່ານ.

 generated on Tue Jun 17 19:01:42 2025

24 [1]ເມື່ອມີຊາຍຄົນຫນຶ່ງທີ່ຮັບເມຍແລະແຕ່ງງານກັບລາວ,
ບໍ່ເປັນທີ່ເພິ່ງພໍໃຈໃນສາຍຕາຂອງເຂົາເພາະເຂົາໄດ້ພົບສິ່ງທີ່ບໍ່ເຫມາະສົມໃນຕົວນາງ, ແລະເຂົາຕ້ອງຂຽນຫນັງສືໃຫ້ລາວສະບັບຫນຶ່ງ,
ໃສ່ໄວ້ໃນມືຂອງນາງ, ແລະໄລ່ນາງອອກຈາກບ້ານຂອງເຂົາ.[2]ເມື່ອເຮົາໄດ້ອອກມາຈາກບ້ານຂອງເຂົາ,
ເຮົາສາມາດເປັນພັນລະຍາຂອງຜູ້ຊາຍອີກຄົນຫນຶ່ງໄດ້.

[3]ຖ້າຫາກມີຄົນທີສອງຊັງນາງແລະຂຽນຫນັງສືຢ່າໃຫ້ນາງ, ໃສ່ໄວ້ໃນມືຂອງນາງ, ແລະໄລ່ນາງອອກໄປຈາກບ້ານຂອງເຂົາ;
ຫລືຫາກສາມີຄົນທີສອງຕາຍຄືຜູ້ຊາຍທີ່ໄດ້ຮັບນາງມາເປັນເມຍຂອງເຂົາ-[4]ຄືຄົນທີ່ໄດ້ໄລ່ນາງອອກຈາກບ້ານຄົນທຳອິດ,
ຈະບໍ່ສາມາດຮັບເຂົາມາເປັນເມຍຂອງເຂົາໄດ້ອີກ,
ຫລັງຈາກທີ່ລາວເປັນຄົນທີ່ບໍ່ບໍຣິສຸດແລ້ວເພາະການທີ່ເຮັດແບບນັ້ນເປັນທີ່ລັງກຽດຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ໄດ້ປະທານໃຫ້ແກ່ພວກທ່ານເປັນມໍຣະດົກ.
[5]ເມື່ອຜູ້ຊາຍຄົນຫນຶ່ງມີເມຍໃຫມ່ຄົນຫນຶ່ງເຂົາຈະບໍ່ໄປຕໍ່ເສິກ, ບໍ່ວ່າເຂົາຈະໄດ້ຮັບຄຳສັ່ງຫນ້າທີ່ໃດກໍຕາມ;
ເຂົາຈະເປັນອິສະລະເປັນເວລາຫນຶ່ງປີແລະຊົມຊື່ນຢູ່ກັບເມຍຂອງເຂົາທີ່ໄດ້ຮັບມານັ້ນ
[6]ຢ່າໃຫ້ໃຜຍຶດໂມ້ຫລືຫີນໂມ້ເອົາໄວ້ເປັນປະກັນ, ເພາະມັນເປັນການຍຶດເອົາຊີວິດຂອງຄົນຫນຶ່ງໄວ້ເປັນປະກັນ.
[7]ຖ້າຫາກຜູ້ຊາຍຄົນຫນຶ່ງຖືກຈັບໄດ້ວ່າລັກພາຕົວພີ່ນ້ອງຄົນໃດຂອງເຂົາໄປຈາກທ່າມກາງຄົນອິສະຣາເອນ,
ແລະເຮັດໃຫ້ເຂົາເປັນທາດແລະຂາຍເຂົາ, ຄົນທີ່ລັກນັ້ນຕ້ອງຕາຍ; ແລະພວກທ່ານຈະກຳຈັດຄວາມຊົ່ວອອກໄປຈາກທ່າມກາງຂອງພວກທ່ານ.
[8]ຈົ່ງລະວັງກ່ຽວກັບໂຣກເຮື້ອນໃດໆ,
ເພື່ອວ່າພວກທ່ານຈະເອົາໃຈໃສ່ປະຕິບັດແລະເຮັດຕາມຄຳສັ່ງສອນທຸກຢ່າງທີ່ໄດ້ມອບເອົາໄວ້ໃຫ້ແກ່ພວກທ່ານທີ່ບັນດາປະໂລຫິດ,
ຄົນເລວີທັງຫລາຍ ໄດ້ສອນພວກທ່ານ, ຕາມທີ່ພວກທ່ານໄດ້ບັນຊາທັງຫມົດນັ້ນ; ເພື່ອພວກທ່ານຈະເຮັດຕາມ.
[9]ຈົ່ງລະນຶກເຖິງສິ່ງທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ເຮັດຄາວທີ່ທ່ານກຳລັງອອກມາຈາກອີຢິບ.
[10]ເມື່ອພວກທ່ານໃຫ້ເພື່ອນບ້ານຂອງພວກທ່ານຢືມສິ່ງໃດໆ, ພວກທ່ານຕ້ອງເຂົ້າໄປໃນບ້ານຂອງພວກເຂົາເພື່ອຍຶດຂອງປະກັນ.
[11]ພວກທ່ານຈະຢືນຢູ່ດ້ານນອກ, ແລະຊາຍຄົນນັ້ນທີ່ພວກທ່ານໃຫ້ຢືມຈະນຳຂອງປະກັນອອກມາໃຫ້ແກ່ພວກທ່ານ.
[12]ຖ້າຫາກເຂົາເປັນຄົນຍາກຈົນ, ພວກທ່ານຕ້ອງບໍ່ຮັບໂດຍມີຂອງປະກັນຂອງເຂົາຢູ່ໃນການຄອບຄອງຂອງພວກທ່ານ.
[13]ພວກທ່ານຕ້ອງຄືນຂອງປະກັນໃຫ້ແກ່ພວກເຂົາກ່ອນຕາເວັນຕົກດິນ,
ເພື່ອເຂົາຈະສາມາດໃຊ້ເສື້ອຄຸມຫົ່ມເວລານອນຫລັບແລະອວຍພອນພວກທ່ານ; ສິ່ງນີ້ເປັນຄວາມຊອບທັມສຳລັບພວກທ່ານ
ຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານ.
[14]ພວກທ່ານຕ້ອງບໍ່ກົດຂີ່ລູກຈ້າງທີ່ຍາກຈົນຂັດສົນ, ບໍ່ວ່າເຂົາຈະເປັນພີ່ນ້ອງຊາວອິສະຣາເອນຂອງພວກທ່ານ,
ຫລືເປັນຄົນຕ່າງຊາດທີ່ອາໄສຢູ່ໃນດິນແດນຂອງພວກທ່ານພາຍໃນປະຕູເມືອງໃດໆກໍຕາມ;
[15]ໃນແຕ່ລະວັນພວກທ່ານຕ້ອງຈ່າຍຄ່າຈ້າງໃຫ້ເຂົາກ່ອນຕາເວັນຈະຕົກດິນກ່ອນທີ່ເລື່ອງນີ້ຈະໄດ້ຮັບການສະສາງ,
ເພາະເຂົາຍາກຈົນແລະມີໃຈຈົດຈໍ່ຢູ່ກັບຄ່າຈ້າງນັ້ນ. ຈົ່ງເຮັດສິ່ງທີ່ເພື່ອເຂົາຈະບໍ່ກ່າວຫາຮ້ອງທູນພວກທ່ານຕໍ່ພຣະຢາເວ,
ແລະເພື່ອຈະບໍ່ເປັນຄວາມບາບທີ່ພວກທ່ານໄດ້ເຮັດ.
[16]ພໍ່ແມ່ທັງຫລາຍຕ້ອງບໍ່ຖືກເຮັດໃຫ້ເຖິງແກ່ຄວາມຕາຍແທນລູກຂອງ, ພວກເຂົາພວກເຂົາຕ້ອງບໍ່ເຮັດໃຫ້ເຖິງແກ່ຄວາມຕາຍແທນແມ່ຂອງເຂົາ.
ແຕ່ທຸກຄົນ, ຕ້ອງຖືກເຮັດໃຫ້ເຖິງແກ່ຄວາມຕາຍເພາະຄວາມບາບຂອງເຂົາເອງ.
[17]ພວກທ່ານຕ້ອງບໍ່ໃຊ້ກຳລັງບັງຄັບຄວາມຍຸຕິທັມໄປຈາກຄົນຕ່າງຊາດ, ຫລືລູກກຳພ້າຫລືຍຶດເສື້ອຄຸມຂອງແມ່ຫມ້າຍເປັນຂອງປະກັນ.
[18]ແຕ່ພວກທ່ານ, ຕ້ອງລະນຶກເຖິງຄາວທີ່ເປັນທາດຢູ່ອີຢິບ, ແລະທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊ່ວຍກູ້ພວກທ່ານຈາກທີ່ນັ້ນ
ດ້ວຍເຫດນີ້ຂ້ານ້ອຍຈຶ່ງສັ່ງສອນໃຫ້ພວກທ່ານເຊື່ອຟັງຄຳບັນຊານີ້.
[19]ເມື່ອພວກທ່ານເກັບກ່ຽວໃນທົ່ງນາຂອງພວກທ່ານ, ແລະຖ້າພວກທ່ານໄດ້ລືມຝ່ອນເຂົ້າມັດຫນຶ່ງໄວ້ໃນທົ່ງນາ, ພວກທ່ານບໍ່ຕ້ອງກັບໄປເອົາ,
ມັນຕ້ອງເປັນຂອງຄົນຕ່າງຊາດ; ຂອງລູກກຳພ້າ, ຫລືຂອງແມ່ຫມ້າຍ,
ເພື່ອວ່າພຣະຢາເວພຣະເຈົ້າຂອງພວກທ່ານຈະອວຍພອນພວກທ່ານໃນການງານທຸກຢ່າງທີ່ມືຂອງທ່ານເຮັດ.[20]ເມື່ອພວກທ່ານສັ່ນຕົ້ນຫມາກກອກ,
ພວກທ່ານຕ້ອງບໍ່ກັບໄປກິ່ງເດີມອີກ; ມັນຈະຕ້ອງເປັນຂອງຄົນຕ່າງຊາດ, ຂອງລູກກຳພ້າ, ຫລືຂອງແມ່ຫມ້າຍ.
[21]ພວກທ່ານຕ້ອງບໍ່ເກັບຊ້ຳທີ່ເດີມ, ສິ່ງທີ່ເຫລືອຢູ່ນັ້ນຈະເປັນຂອງຄົນຕ່າງຊາດ, ເປັນຂອງລູກກຳພ້າ, ແລະເປັນຂອງແມ່ຫມ້າຍ.
[22]ພວກທ່ານຕ້ອງລະນຶກເຖິງເມື່ອຄາວທີ່ພວກທ່ານເປັນທາດຢູ່ໃນດິນແດນອີຢິບ,
ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງສັ່ງສອນພວກທ່ານໃຫ້ເຊື່ອຟັງຄຳບັນຊານີ້.

25 [1]ຖ້າຫາກມີຂໍ້ພິພາກສາຂຶ້ນລະຫວ່າງມະນຸດດ້ວຍກັນ, ແລະພວກເຂົາໄປທີ່ສານແລະຜູ້ພິພາກສາຕັດສິນຄະດີຂອງພວກເຂົາ,
ແລ້ວພວກເຂົາກໍຈະປະກາດວ່າບໍ່ມີຄວາມຜິດສຳລັບຄວາມຊອບທັມແລະປະກາດລົງໂທດຄົນທີ່ເຮັດຊົ່ວ.
[2]ສຳລັບຄົນທີ່ເຮັດຜິດແມ່ນຕ້ອງໄດ້ຮັບການໂບຍຕີ,
ແລ້ວຜູ້ພິພາກສາຈະໃຫ້ເຂົານອນລົງແລະນະໂຍບາຍຕໍ່ຫນ້າຜູ້ພິພາກສາພ້ອມກັບຄຳສັ່ງໃຫ້ໂບຍຕີຈັກເທື່ອກະໄດ້,
ແລ້ວແຕ່ການເຮັດຜິດຂອງຄົນນັ້ນ.

[3]ຜູ້ພິພາກສາຈະໃຫ້ເຂົາຖືກໂບຍຕີສີ່ສິບຄັ້ງກໍໄດ້, ແຕ່ເຂົາຈະຕ້ອງບໍ່ຖືກໂຈມຕີກາຍຈຳນວນນັ້ນ;
ຖ້າຫາກເຂົາສົມຄວນຖືກໂບຍຕີຫລາຍກວ່າຈຳນວນນັ້ນແລ້ວໂບຍຕີຫລາຍກວ່ານັ້ນແລ້ວ,
ພີ່ນ້ອງຊາວອິສະຣາເອນຂອງພວກທ່ານຈະເຮັດໃຫ້ເສຍກຽດຕິຍົດຕໍ່ຫນ້າຕໍ່ຕາພວກທ່ານ.
[4]ພວກທ່ານບໍ່ຕ້ອງເອົາກະສອບອັດປາກງົວຂະນະທີ່ນວດເຂົ້າຢູ່.
[5]ຖ້າຫາກພີ່ນ້ອງອາໄສຢູ່ດ້ວຍກັນແລະຖ້າຫາກຫນຶ່ງໃນນັ້ນມີຜູ້ໃດຕາຍ, ໂດຍບໍ່ມີລູກແມ່ແຕ່ຄົນດຽວ,
ແລ້ວເມຍຂອງຄົນທີ່ຕາຍຕ້ອງບໍ່ແຕ່ງງານກັບຄົນພາຍນອກຄອບຄົວນີ້. ແຕ່ນ້ອງຊາຍຂອງຜົວລາວ, ຕ້ອງຫລັບນອນກັບນາງ, ແລະຮັບເປັນເມຍ,
ແລະເຮັດຫນ້າທີ່ໃຫ້ແທນອ້າຍຂອງເຂົາ.[6]ສິ່ງນີ້ເພື່ອລູກຫົວປີຈະສືບຊື່ຂອງອ້າຍຄົນທີ່ຕາຍໄປແລ້ວນັ້ນ,
ເພື່ອວ່າຊື່ຂອງເຂົາຈະບໍ່ຖືກລົບໄປຈາກອິສະຣາເອນ.
[7]ຖ້າຜູ້ຊາຍຄົນນັ້ນບໍ່ປາຖະຫນາຮັບເມຍຂອງອ້າຍຂອງເຂົາມາເປັນເມຍຂອງຕົນເອງ,
ແລ້ວເມຍຂອງອ້າຍເຂົາຕ້ອງໄປທີ່ປະຕູເມືອງເພື່ອຫາບັນດາຜູ້ໃຫຍ່ແລະເວົ້າວ່າ,
'ນ້ອງຊາຍຂອງຜົວປະຕິເສດທີ່ຈະຍົກຊື່ຂອງອ້າຍຂອງເຂົາໃນອິສະຣາເອນ; ເຂົາຈະບໍ່ປະຕິບັດຫນ້າທີ່ນ້ອງຊາຍຂອງສາມີຕໍ່ນາງ'.
[8]ແລ້ວບັນດາຜູ້ໃຫຍ່ຂອງເມືອງເຂົາຕ້ອງເອີ້ນເຂົາມາແລະເວົ້າກັບເຂົາ. ແຕ່ຖ້າຫາກເຂົາຍັງຢືນຢັນແລະເວົ້າວ່າ,
'ຂ້ານ້ອຍບໍ່ປາຖະຫນາຈະຮັບນາງເປັນເມຍ'.
[9]ແລ້ວເມຍຂອງນ້ອງຊາຍເຂົາຕ້ອງຂຶ້ນມາຫາເຂົາຕໍ່ຫນ້າບັນດາຜູ້ໃຫຍ່, ຖອດເກີບແຕະອອກແລະຖົ່ມນ້ຳລາຍໃສ່ຫນ້າເຂົາ
ນາງຕ້ອງຕອບເຂົາແລະເວົ້າວ່າ, 'ນີ້ຄືສິ່ງທີ່ສົມຄວນເຮັດກັບຜູ້ຊາຍຄົນນັ້ນທີ່ບໍ່ສ້າງວົງຕະກຸນຂອງອ້າຍຂອງເຂົາ'.
[10]ຊື່ຂອງເຂົາຈະຖືກເອີ້ນໃນອິສະຣາເອນວ່າ, 'ວົງຕະກຸນຂອງເຂົາທີ່ເກີບແຕະຖືກຖອດອອກ'.
[11]ແຕ່ຫາກມີຜູ້ຊາຍຕໍ່ສູ້ກັນ, ແລະເມຍຂອງຄົນຫນຶ່ງໃນນັ້ນມາເພື່ອຊ່ວຍຊີວິດຜົວຂອງລາວຈາກມືຂອງຄົນນັ້ນທີ່ທຳຮ້າຍເຂົາ, ແລະ
ຖ້າຫາກນາງຢື່ນມືອອກມາແລະຈັບຂອງລັບຂອງເຂົາ,[12]ແລ້ວພວກທ່ານຕ້ອງຕັດມືຂອງນາງຖິ້ມ; ສາຍຕາຂອງພວກທ່ານຕ້ອງບໍ່ມີຄວາມສົງສານ.
[13]ພວກທ່ານຕ້ອງບໍ່ໃຫ້ມີລູກຕຸ້ມນ້ຳຫນັກແຕກຕ່າງກັນໃນກະເປົາຂອງພວກທ່ານໃຫຍ່ອັນຫນຶ່ງ, ແລະນ້ອຍອັນຫນຶ່ງ.
[14]ພວກທ່ານຕ້ອງບໍ່ມີເຄື່ອງວັດທີ່ແຕກຕ່າງກັນໃນບ້ານຂອງພວກທ່ານ, ໃຫຍ່ອັນຫນຶ່ງແລະນ້ອຍອັນຫນຶ່ງ.
[15]ພວກທ່ານຕ້ອງມີລູກຕຸ້ມນ້ຳຫນັກຫນຶ່ງອັນທີ່ຖືກຕ້ອງແລະແມ້ນຢໍາ;
ເພື່ອວ່າຊີວິດຂອງທ່ານຈະຍືນຍາວໃນດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານໃຫ້ພວກທ່ານ.
[16]ເພາະທຸກຄົນທີ່ເຮັດຢ່າງນັ້ນ, ທຸກຄົນທີ່ເຮັດຢ່າງບໍ່ຊອບທັມນັ້ນ, ກໍເປັນທີ່ຫນ້າລັງກຽດຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ.
[17]ຈົ່ງລະນຶກເຖິງສິ່ງທີ່ຄົນອາມາເລກເຮັດຕໍ່ພວກທ່ານຕາມຫົນທາງເມື່ອພວກທ່ານອອກມາຈາກອີຢິບ,
[18]ທີ່ພວກເຂົາໄດ້ມາພົບທ່ານດ້ານຫລັງແນວໃດ, ທຸກຄົນທີ່ອ່ອນກຳລັງໃນກອງຫລັງຂອງພວກທ່ານ, ເມື່ອພວກທ່ານອ່ອນລ້າແລະອ່ອນແຮງ
ເຂົາບໍ່ໄດ້ຖວາຍກຽດແດ່ພຣະເຈົ້າ.[19]ດ້ວຍເຫດນີ້
ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານໄດ້ປະທານຄວາມສະຫງົບຈາກເຫລົ່າສັດຕຣູທັງຫມົດຂອງພວກທ່ານ,
ໃນດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງປະທານໃຫ້ພວກທ່ານເພື່ອຍຶດຄອງເປັນມໍຣະດົກນັ້ນ,
ພວກທ່ານຕ້ອງບໍ່ລືມວ່າທ່ານຕ້ອງເຮັດໃຫ້ຄົນອາມາເລກສິ້ນໄປຈາກຄວາມຊົງຈຳພາຍໃຕ້ທ້ອງຟ້າ.

# 26

[1]ເມື່ອພວກທ່ານກຳລັງເຂົ້າໄປໃນດິນແດນທີ່ພຣະເຈົ້າຂອງພວກທ່ານກຳລັງປະທານໃຫ້ແກ່ພວກທ່ານເປັນມໍຣະດົກນັ້ນ,
ແລະເມື່ອພວກທ່ານຍຶດຄອງດິນແດນນັ້ນແລະອາໄສຢູ່ທີ່ນັ້ນ,
[2]ແລ້ວພວກທ່ານຕ້ອງເອົາຜົນທຳອິດຂອງການເກັບກ່ຽວທັງຫມົດຂອງແຜ່ນດິນທີ່ພວກທ່ານໄດ້ນຳເຂົ້າມາຈາກດິນແດນພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະ
ພວກທ່ານຕ້ອງນຳຜົນນັ້ນໃສ່ກະຕ່າແລະໄປຍັງສະຖານທີ່
ທີ່ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງເລືອກໃຫ້ເປັນດັ່ງສະຖານທີ່ນະມັດສະການຂອງພຣະອົງ.

[3]ພວກທ່ານຕ້ອງໄປຫາປະໂລຫິດຜູ້ທີ່ກຳລັງປະຕິບັດໃນເວລານັ້ນແລະເວົ້າກັບເຂົາວ່າ,
'ໃນເວລານີ້ຂ້ານ້ອຍຍອມຮັບຕໍ່ພຣະຢາເວພຣະເຈົ້າຂອງພວກທ່ານ
ຂ້ານ້ອຍໄດ້ມາເຖິງດິນແດນນີ້ທີ່ພຣະຢາເວໄດ້ຊົງສັນຍາກັບບັນພະບຸຣຸດຂອງພວກເຮົາວ່າຈະປະທານໃຫ້ແກ່ພວກເຮົາ'.
[4]ປະໂລຫິດຕ້ອງຮັບກະຕ່ານັ້ນຈາກມືຂອງພວກທ່ານແລະວາງມັນລົງຕໍ່ຫນ້າແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
[5]ພວກທ່ານຕ້ອງເວົ້າຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານວ່າ, 'ບັນພະບຸຣຸດຂອງຂ້ານ້ອຍຄືອາຣາມ.
ຜູ້ເລ້ລ້ອນເຂົາໄດ້ລົງໄປຍັງອີຢິບແລະອາໄສຢູ່ທີ່ນັ້ນ, ແລະປະຊາຊົນຂອງເຂົາມີຈຳນວນຫນ້ອຍ. ທີ່ນັ້ນເຂົາໄດ້ກາຍເປັນຊົນຊາດທີ່ຫຍິ່ງໃຫຍ່
ເຂັ້ມແຂງແລະມີປະຊາຊົນແຫນ້ນຫນາ.
[6]ຊາວອີຢິບໄດ້ປະຕິບັດຕໍ່ເຮົາຢ່າງຊົ່ວຮ້າຍ ແລະໄດ້ທໍຣະມານພວກເຮົາ. ພວກເຂົາໃຫ້ເຮົາເຮັດວຽກເປັນທາດ.[7]ເຮົາໄດ້ຮ້ອງທູນພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດທັງຫລາຍຂອງພວກເຮົາແລະພຣະອົງໄດ້ຊົງຟັງສຽງຂອງເຮົາແລະໄດ້ເຫັນຄວາມທໍຣະມານຂອງພວກເຮົາ,
ການເຮັດວຽກຫນັກຂອງພວກເຮົາ, ແລະການດູຖູກກົດຂີ່ຂອງພວກເຮົາ.
[8]ພຣະຢາເວໄດ້ນຳເຮົາອອກມາຈາກອີຢິບດ້ວຍພຣະຫັດອັນຊົງຣິດຂອງພຣະອົງ, ດ້ວຍພຣະກາຍທີ່ຢຽດອອກ,
ດ້ວຍສິ່ງທີ່ຫນ້າຢຳເກງຢ່າງຍິ່ງໃຫຍ່ຕ່າງໆ;[9]ແລະພຣະອົງໄດ້ຊົງນຳພວກເຮົາມາສະຖານທີ່ນີ້ແລະໄດ້ຊົງປະທານດິນແດນໃຫ້ແກ່ພວກເຮົາ,
ຄືດິນແດນຫນຶ່ງທີ່ມີນ້ຳນົມແລະນ້ຳເຜິ້ງໄຫລ.
[10]ເບິ່ງສາເວລານີ້, ຂ້ານ້ອຍໄດ້ນຳຜົນແລກຂອງການເກັບກ່ຽວທີ່ແຜ່ນດິນຂອງພຣະອົງຄືພຣະຢາເວ, ໄດ້ປະທານໃຫ້ແກ່ພວກເຈົ້າ,
ພວກທ່ານຕ້ອງວາງມັນລົງຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານ, ແລະນະມັດສະການຕໍ່ຫນ້າພຣະພັກຂອງພຣະອົງ;
[11]ແລະພວກທ່ານຕ້ອງຊື່ນຊົມຍິນດີທຸກສິ່ງທີ່ພຣະຢາເວພຣະເຈົ້າຂອງພວກທ່ານໄດ້ຊົງເຮັດເພື່ອພວກທ່ານ, ເພື່ອຄອບຄົວຂອງພວກທ່ານຄື,
ຕົວພວກທ່ານ, ແລະຄົນເລວີ, ແລະຄົນຕ່າງຊາດທີ່ຢູ່ທ່າມກາງພວກທ່ານ.
[12]ເມື່ອພວກທ່ານຖວາຍສິບລົດທັງຫມົດຂອງການເກັບກ່ຽວຂອງທ່ານໃນປີທີສາມແລ້ວ, ນັ້ນຄື, ປີແຫ່ງການຖວາຍສິບລົດ,
ແລ້ວພວກທ່ານຕ້ອງມອບສິ່ງນັ້ນໃຫ້ຄົນເລວີ, ແກ່ຄົນຕ່າງຊາດ, ແກ່ລູກກຳພ້າ, ແກ່ແມ່ຫມ້າຍ,
ເພື່ອວ່າພວກເຂົາສາມາດກິນໃນປະຕູເມືອງຕ່າງໆ, ຂອງພວກທ່ານແລະອີ່ມຫນຳ.
[13]ພວກທ່ານຕ້ອງເວົ້າຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານວ່າ,'ຂ້ານ້ອຍໄດ້ນຳສິ່ງຕ່າງໆທີ່ເປັນຂອງພຣະຢາເວອອກຈາກບ້ານຂອງຂ້ານ້ອຍ,
ແລະໄດ້ມອບສິ່ງເຫລົ່ານັ້ນແກ່ຄົນເລວີ, ແກ່ຄົນຕ່າງຊາດ, ແກ່ລູກກຳພ້າ, ແລະ ແມ່ຫມ້າຍ,
ຕາມບັນຍັດທັງຫມົດຂອງພຣະອົງທີ່ພຣະອົງປະທານແກ່ຂ້ານ້ອຍ, ຂ້ານ້ອຍບໍ່ໄດ້ລະເມີດບັນຍັດຂອງພຣະອົງແມ່ນແຕ່ຂໍ້ດຽວ, ແລະ
ບໍ່ໄດ້ລືມເລີຍ.
[14]ຂ້ານ້ອຍບໍ່ໄດ້ກິນສິ່ງໃດໆ, ຈາກສິ່ງເຫລົ່ານັ້ນໃນການໄວ້ທຸກຂອງຂ້ານ້ອຍ, ຫລືຂ້ານ້ອຍບໍ່ໄດ້ວາງມັນທີ່ໃດເມື່ອຂ້ານ້ອຍບໍ່ບໍຣິສຸດ,
ຫລືຂ້ານ້ອຍບໍ່ໄດ້ມອບສິ່ງໃດໆຂອງສິ່ງເຫລົ່ານັ້ນເພື່ອໃຫ້ກຽດແກ່ຄົນຕາຍ ຂ້ານ້ອຍໄດ້ຟັງສຽງຂອງພຣະຢາເວພຣະເຈົ້າຂອງຂ້ານ້ອຍ;
ຂ້ານ້ອຍໄດ້ເຊື່ອຟັງທຸກສິ່ງທີ່ພຣະອົງໄດ້ບັນຊາໃຫ້ຂ້ານ້ອຍເຮັດ.[15]ທີ່ພຣະອົງໄດ້ປະທັບຄືຈາກສະຫວັນ,
ແລະຂໍຊົງອວຍພອນປະຊາຊົນອິສະຣາເອນຂອງພຣະອົງ, ແລະດິນແດນທີ່ພຣະອົງໄດ້ປະທານໃຫ້ພວກເຮົາ,
ຕາມທີ່ພຣະອົງໄດ້ຊົງສັນຍາກັບບັນພະບຸຣຸດຂອງເຮົາ, ຄືດິນແດນຫນຶ່ງທີ່ມີນ້ຳນົມແລະນ້ຳເຜິ້ງໄຫລ'.
[16]ວັນນີ້ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງບັນຊາພວກທ່ານໃຫ້ເຊື່ອຟັງກົດຫມາຍແລະກົດເກນຕ່າງໆເຫລົ່ານີ້; ດັ່ງນັ້ນ
ພວກທ່ານຈະຖືຮັກສາຖ້ອຍຄຳເຫລົ່ານີ້ແລະເຮັດຕາມດ້ວຍສິ້ນສຸດໃຈແລະດ້ວຍສິ້ນສຸດຈິດຂອງພວກທ່ານ.
[17]ພວກທ່ານໄດ້ປະກາດໃນວັນນີ້ວ່າພຣະຢາເວຊົງເປັນພຣະເຈົ້າຂອງພວກທ່ານ, ແລະ ພວກທ່ານຈະດຳເນີນໃນທາງທັງຫລາຍຂອງພຣະອົງ,
ແລະ ຖືຮັກສາກົດຫມາຍຕ່າງໆຂອງພຣະອົງ, ພຣະບັນຊາຕ່າງໆຂອງພຣະອົງ, ແລະ ພວກທ່ານຈະຟັງພຣະສຸຣະສຽງຂອງພຣະອົງ.
[18]ວັນນີ້ພຣະຢາເວໄດ້ຊົງປະກາດວ່າພວກທ່ານເປັນປະຊາຊົນທີ່ເປັນກຳມະສິດຂອງພຣະອົງເອງ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ກັບພວກທ່ານ,
ແລະ ພວກທ່ານຕ້ອງຖືຮັກສາບັນຍັດທັງຫມົດຂອງພຣະອົງ,[19]ແລະພຣະອົງຈະຕັ້ງພວກທ່ານໃຫ້ສູງເຫນືອຊົນຊາດອື່ນໆ,
ທັງຫມົດທີ່ພຣະອົງໄດ້ຊົງສ້າງ ແລະ ພວກທ່ານຈະໄດ້ຮັບຄຳສັນຣະເສີນ, ແລະ ຊື່ສຽງ, ກຽດຕິຍົດ.
ພວກທ່ານຈະເປັນປະຊາຊົນທີ່ຖືກແຍກອອກໄວ້ເພື່ອພຣະຢາເວພຣະເຈົ້າຂອງພວກທ່ານ, ຄືດັ່ງພຣະອົງໄດ້ຊົງກ່າວນັ້ນ.


generated on Tue Jun 17 19:01:42 2025

# 27

1ໂມເຊແລະບັນດາຜູ້ໃຫຍ່ຂອງອິສະຣາເອນໄດ້ບັນຊາປະຊາຊົນແລະເວົ້າວ່າ,"
ຈົ່ງຖືຮັກສາພຣະບັນຊາທັງຫລາຍຊຶ່ງຂ້ານ້ອຍໄດ້ບັນຊາພວກທ່ານໃນວັນນີ້.
2ໃນວັນນີ້ເມື່ອພວກທ່ານຈະຂ້ວາມແມ່ນ້ຳຈໍແດນເຂົ້າສູ່ດິນແດນພຣະຢາເວພຣະເຈົ້າຂອງພວກທ່ານກຳລັງປະທານໃຫ້ແກ່ພວກທ່ານ,
ພວກທ່ານຕ້ອງຕັ້ງກ້ອນຫີນຈຳນວນຫນຶ່ງຂຶ້ນສາບປູນ.3ພວກທ່ານຕ້ອງຂຽນຖ້ອຍຄຳຕ່າງໆ ຂອງກົດຫມາຍນີ້ເມື່ອພວກທ່ານໄດ້ຂ້ວາມໄປ,
ເພື່ອພວກທ່ານຈະສາມາດເຂົ້າສູ່ດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານກຳລັງຈະປະທານໃຫ້ແກ່ພວກທ່ານ,
ຄືດິນແດນທີ່ມີນ້ຳນົມແລະນ້ຳເຜິ້ງໄຫລບໍຣິບູນ, ຕາມທີ່ພຣະຢາເວ, ພຣະເຈົ້າຂອງບັນພະບຸຣຸດພວກທ່ານໄດ້ຊົງສັນຍາແກ່ພວກທ່ານ.

4ເມື່ອພວກທ່ານໄດ້ຂ້ວາມແມ່ນ້ຳຈໍແດນ, ຈົ່ງຕັ້ງຫີນເຫລົ່ານີ້ທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້, ທີ່ເທິງພູເຂົາເອບາ,
ແລະສາບຫີນເຫລົ່ານັ້ນດ້ວຍປູນຂາວ.5ທີ່ນັ້ນພວກທ່ານຕ້ອງສ້າງແທ່ນບູຊາຖວາຍແດ່ພຣະຢາເວພຣະເຈົ້າຂອງພວກທ່ານ,
ຄືແທ່ນບູຊາທີ່ເຮັດຈາກຫີນທັງຫລາຍ; ແຕ່ພວກທ່ານຕ້ອງບໍ່ໃຊ້ເຄື່ອງມືເຫລັກສະກັດກ້ອນຫີນເຫລົ່ານັ້ນ.
6ພວກທ່ານຕ້ອງສ້າງແທ່ນບູຊາພຣະຢາເວພຣະເຈົ້າຂອງພວກທ່ານດ້ວຍຫີນທີ່ຍັງບໍ່ໄດ້ສະກັດ;
ພວກທ່ານຕ້ອງເຜົາແທ່ນບູຊານັ້ນຖວາຍແດ່ພຣະຢາເວພຣະເຈົ້າຂອງພວກທ່ານ.7ແລະທ່ານຈະຖວາຍເຄື່ອງສັນຕິບູຊາແລະຈະກິນທີ່ນັ້ນ;
ພວກທ່ານຈະຊື່ນຊົມຍິນດີຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກທ່ານ.8ພວກທ່ານຈະຂຽນຖ້ອຍຄຳທີ່ຊັດເຈນເທິງຫີນເຫລົ່ານັ້ນ".
9ໂມເຊແລະບັນດາປະໂລຫິດທັງຫລາຍ, ຄົນເລວີທັງຫລາຍ ໄດ້ກ່າວຕໍ່ຄົນອິສະຣາເອນທັງຫມົດແລະເວົ້າວ່າ, "ອິສະຣາເອນເອີຍ,
ຈົ່ງມິດແລະຟັງ: ໃນວັນນີ້ພວກທ່ານໄດ້ມາເປັນປະຊາຊົນຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
10ດ້ວຍເຫດນີ້ພວກທ່ານຕ້ອງເຊື່ອຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານແລະ ເຊື່ອຟັງພຣະບັນຍັດຕ່າງໆ
ແລະກົດຫມາຍຂອງຂ້ານ້ອຍຕາມທີ່ໄດ້ບັນຊາພວກທ່ານໃນວັນນີ້".
11ໂມເຊໄດ້ບັນຊາປະຊາຊົນໃນວັນດຽວກັນແລະເວົ້າວ່າ,
"12ຊົນເຜົ່າເຫລົ່ານີ້ຕ້ອງຢືນເທິງພູເຂົາເກຣິຊີເພື່ອອວຍພອນປະຊາຊົນຫລັງຈາກພວກທ່ານໄດ້ຂ້ວາມແມ່ນ້ຳຈໍແດນມາແລ້ວ ໄດ້ແກ່,
ເຜົ່າຊີເມໂອນ, ເຜົ່າເລວີ, ເຜົ່າຢູດາ, ເຜົ່າອິດຊາຄາ, ເຜົ່າໂຢເຊັບ, ແລະເຜົ່າເບັນຢາມິນ.
13ທັງຫມົດນີ້ຄືເຜົ່າຕ່າງໆ ທີ່ຕ້ອງຢືນເທິງພູເຂົາເອບານເພື່ອປະກາດຄຳແຊ່ງສາບ ໄດ້ແກ່: ເຜົ່າຣູເບນ, ເຜົ່າກາດ, ເຜົ່າອາເຊ, ເຜົ່າເຊບູໂລນ,
ເຜົ່າດານ, ແລະເຜົ່ານັບທາລີ.14ຄົນເລວີທັງຫລາຍຈະຕອບແລະເວົ້າຕໍ່ຄົນທັງຫມົດຂອງອິສະຣາເອນດ້ວຍສຽງອັນດຽວກັນວ່າ:
15ຂໍຄົນນັ້ນຖືກສາບແຊ່ງຄືຄົນທີ່ສ້າງຮູບປັ້ນຫລືຮູບແກະສະຫລັກ, ຊຶ່ງເປັນຫນ້າລັງກຽດຂອງພຣະຢາເວ, ຜົນງານແຫ່ງນ້ຳມືຂອງຊ່າງຝີມື,
ແລະຄົນທີ່ຕັ້ງມັນໄວ້ໃນທີ່ລັບ," ແລ້ວປະຊາຊົນຈຶ່ງຕອບແລະ ກ່າວວ່າ "ເອແມນ".
16ຄຳແຊ່ງສາບເປັນຂອງຜູ້ໃດຜູ້ໜຶ່ງທີ່ບໍ່ເຄົາລົບນັບຖືພໍ່ແມ່ຂອງຕົນ. ແລ້ວປະຊາຊົນຕ້ອງກ່າວວ່າ,'ອາແມນ'.17ຂໍໃຫ້ທຸກຄົນນັ້ນຖືກສາບແຊ່ງ
ຄືຄົນທີ່ຍ້າຍຫລັກເຂດເພື່ອນບ້ານຂອງເຂົາ" ແລ້ວປະຊາຊົນຕ້ອງກ່າວວ່າ "ອາແມນ".
18ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ເຮັດໃຫ້ຄົນຕາບອດຫລົງທາງ. "ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ"ອາແມນ"19ຂໍໃຫ້ຄົນນັ້ນຖືກສາບແຊ່ງ
ຄືຄົນທີ່ໃຊ້ກຳລັງບັງຄັບຄວາມຍຸຕິທັມອອກໄປຈາກຄົນຕ່າງຊາດ, ລູກກຳພ້າ, ຫລືແມ່ຫມ້າຍ, ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ"ເອແມນ".
20ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ນອນກັບພໍ່ຂອງພໍ່ຂອງເຂົາ, ເພາະເຂົາໄດ້ເອົາສິດຂອງພໍ່ຂອງເຂົາໄປ," ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ
"ອາແມນ"21ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ຫລັບນອນກັບສັດຊະນິດໃດໆ, ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ "ອາແມນ".
22ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ນອນກັບພີ່ນ້ອງຜູ້ຍິງຂອງເຂົາ, ຄືຜູ້ທີ່ເປັນຜູ້ຍິງຂອງພໍ່ຂອງເຂົາ, ຫລືກັບຜູ້ຍິງຂອງແມ່ຂອງເຂົາ, ແລ້ວ
ປະຊາຊົນທຸກຄົນຕ້ອງກ່າວວ່າ "ອາແມນ"23ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ນອນກັບແມ່ຕູ້ຂອງເຂົາ ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ
"ອາແມນ".
24ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ຂ້າເພື່ອນບ້ານຂອງເຂົາໃນທີ່ລັບ, ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ'ອາແມນ.'25ຂໍໃຫ້ຄົນນັ້ນຖືກສາບແຊ່ງ,
ຄືຄົນຮັບສິນບົນເພື່ອຂ້າຄົນບໍຣິສຸດ, ແລ້ວປະຊາຊົນທຸກຄົນຕ້ອງກ່າວວ່າ "ອາແມນ".
26ຂໍໃຫ້ຄົນນັ້ນຖືກສາບແຊ່ງ ຄືຄົນທີ່ບໍ່ຢຶດຫມັ້ນໃນຖ້ອຍຄຳຕ່າງໆ ທີ່ເປັນກົດຫມາຍນີ້, ທີ່ເຂົາຈະຟັງເພື່ອຖ້ອຍຄຳເຫລົ່ານັ້ນ,
ແລ້ວປະຊາຊົນຕ້ອງກ່າວວ່າ, "ອາແມນ".

 generated on Tue Jun 17 19:01:42 2025

# 28

[1]ຖ້າພວກທ່ານເອົາໃຈໃສ່ໃນການຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານເພື່ອຖືຮັກສາພຣະບັນຍັດທັງຫມົດຂອງພຣະອົງທີ່ຂ້ານ້ອຍບັນຊາພວກທ່ານໃນວັນ
ພຣະຢາເວພຣະເຈົ້າຂອງພວກທ່ານຈະຕັ້ງພວກທ່ານເຫນືອຊົນຊາດອື່ນໆ ທັງຫມົດແຜ່ນດິນໂລກນີ້.
[2]ພຣະພອນທັງຫມົດເຫລົ່ານີ້ຈະມາເຖິງພວກທ່ານ, ຈົ່ງຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ.

[3]ພຣະພອນຈະເປັນຂອງພວກທ່ານທີ່ໃນເມືອງຕ່າງໆພ້ອມໄຮ່ນາຮົ້ວສວນ.[4]ແລະພຣະພອນຈະເປັນຂອງທ່ານໃນທົ່ງນາ
ຜົນຈາກຮ່າງກາຍຂອງພວກທ່ານ, ແລະຜົນຈາກສັດຕ່າງໆ ຂອງພວກທ່ານ, ທີ່ເພີ່ມພູນ ແລະລູກອ່ອນຂອງຝູງສັດຂອງພວກທ່ານ.
[5]ພຣະອົງຈະຊົງອວຍພອນພວກທ່ານໃຫ້ມີພືດຜົນຫລາຍ.[6]ພວກທ່ານຈະໄດ້ຮັບພຣະພອນເມື່ອເຂົ້າມາ, ພວກທ່ານຈະໄດ້ຮັບພຣະພອນເມື່ອ
ອອກໄປ.
[7]ພຣະຢາເວເຮັດໃຫ້ສັດຕຣູຂອງພວກທ່ານທີ່ລຸກຂຶ້ນຕໍ່ສູ້ພວກທ່ານນັ້ນພ່າຍແພ້ ຕໍ່ຫນ້າຕໍ່ຕາພວກທ່ານ;
ພວກເຂົາຈະເຂົ້າມາຕໍ່ສູ້ພວກທ່ານຫນຶ່ງທາງແຕ່ຈະຫນີໄປຈາກພວກທ່ານເຈັດທາງ.
[8]ພຣະຢາເວຊົງບັນຊາພຣະພອນມາເຫນືອພວກທ່ານແລະໃນທຸກສິ່ງທີ່ມືຂອງພວກທ່ານເຮັດ;
ພຣະອົງຈະຊົງອວຍພອນພວກທ່ານໃນດິນແດນທີ່ພຣະອົງກໍາລັງຈະປະທານໃຫ້ແກ່ພວກທ່ານ.
[9]ພຣະຢາເວຊົງສະຖາປະນາໃຫ້ພວກທ່ານໃຫ້ເປັນຊົນຊາດຫນຶ່ງທີ່ຖືກແຍກໄວ້ເພື່ອພຣະອົງເອງ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ກັບພວກທ່ານ,
ຖ້າທ່ານຖືຮັກສາບັນຍັດຕ່າງໆ ຂອງພຣະຢາເວພຣະເຈົ້າຂອງພວກທ່ານ. ແລະດໍາເນີນໃນທາງທັງຫລາຍຂອງພຣະອົງ.
[10]ຊົນຊາດຕ່າງໆເທິງແຜ່ນດິນໂລກນີ້ຈະເບິ່ງເຫັນວ່າພວກທ່ານຖືກເອີ້ນໂດຍພຣະນາມຂອງພຣະຢາເວ, ແລະພວກເຂົາຈະເກງຢ້ານພວກທ່ານ.
[11]ພຣະຢາເວຊົງເຮັດໃຫ້ພວກທ່ານຈະເຣີນຮຸ່ງເຮືອງດ້ວຍຜົນຈາກຮ່າງກາຍຂອງພວກທ່ານ, ດ້ວຍຜົນຈາກຝູງສັດຂອງພວກທ່ານ,
ດ້ວຍຜົນຈາກແຜ່ນດິນຂອງພວກທ່ານ, ໃນແຜ່ນດິນທີ່ພຣະອົງໄດ້ຊົງບັນຊາໄວ້ກັບບັນພະບຸຣຸດຂອງພວກທ່ານວ່າຈະປະທານໃຫ້ແກ່ພວກທ່ານ.
[12]ພຣະຢາເວຈະຊົງເປີດຄັງແຫ່ງສະຫວັນຂອງພຣະອົງເພື່ອປະທານຝົນໃຫ້ແກ່ແຜ່ນດິນຂອງພວກທ່ານໃນເວລາທີ່ເຫມາະສົມ,
ແລະຊົງອວຍພອນການງານທຸກຢ່າງທີ່ມືຂອງພວກທ່ານເຮັດພວກທ່ານຈະເປັນຜູ້ໃຫ້ຢືມແກ່ຊົນຊາດທັງຫລາຍ,
ແຕ່ພວກທ່ານຈະບໍ່ເປັນຜູ້ທີ່ຂໍຢືມ.
[13]ພຣະຢາເວພຣະເຈົ້າຂອງພວກທ່ານເຮັດໃຫ້ພວກທ່ານເປັນຫົວ, ແລະບໍ່ແມ່ນຫາງ ພວກທ່ານຢູ່ເຫນືອກວ່າເທົ່ານັ້ນ,
ແລະພວກທ່ານຈະບໍ່ມີວັນຢູ່ພາຍໃຕ້,
ຖ້າທ່ານຟັງພຣະບັນຍັດທັງຫລາຍຂອງພຣະຢາເວພຣະເຈົ້າຂອງພວກທ່ານທີ່ຂ້າພະເຈົ້າກໍາລັງບັນຊາພວກທ່ານໃນວັນນີ້,
ດັ່ງນັ້ນຈົ່ງປະຕິບັດແລະເຮັດຕາມຖ້ອຍຄໍາເຫລົ່ານີ້.[14]ແລະພວກທ່ານຈະບໍ່ຫັນຫນີຈາກຖ້ອຍຄໍາໃດໆ ທີ່ຂ້ານ້ອຍກໍາລັງບັນຊາພວກທ່ານໃນວັນນີ້,
ໄປທາງຂວາມືຫລືຊ້າຍມື ຄືໄປຕິດຕາມພະອື່ນໆ ເພື່ອປະຕິບັດພະເຫລົ່ານັ້ນ.
[15]ແຕ່ຖ້າພວກທ່ານບໍ່ຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອຖືຮັກສາບັນຍັດທັງຫລາຍຂອງພຣະອົງ ແລະ
ກົດຫມາຍຂອງພຣະອົງທີ່ຂ້ານ້ອຍກໍາລັງບັນຊາພວກທ່ານໃນວັນນີ້,
ແລ້ວຄໍາແຊ່ງສາບເຫລົ່ານີ້ທັງຫມົດຈະມາເຖິງພວກທ່ານແລະຕາມທັນພວກທ່ານ.
[16]ຄໍາສາບແຊ່ງຈະຕາມທັນພວກທ່ານເມື່ອພວກທ່ານຢູ່ໃນເມືອງ, ແລະຄໍາສາບແຊ່ງຈະຕາມທັນພວກທ່ານເມື່ອຢູ່ໃນທົ່ງນາ.
[17]ພືດຜົນແລະອາຫານການກິນທີ່ໄດ້ມາຈາກພືດຈະຖືກສາບແຊ່ງ.
[18]ຜົນຈາກຮ່າງກາຍຂອງພວກທ່ານຈະຖືກແຊ່ງສາບ, ຜົນຈາກແຜ່ນດິນຂອງພວກທ່ານຄືຝູງສັດທີ່ເພີ່ມພູນຂອງພວກທ່ານ,
ແລະລູກອ່ອນຂອງຝູງສັດຂອງທ່ານນັ້ນ.[19]ຄໍາສາບແຊ່ງຈະຕາມທັນເມື່ອພວກທ່ານເຂົ້າມາ,
ແລະຄໍາສາບແຊ່ງຈະຕາມທັນເມື່ອພວກທ່ານອອກໄປ.
[20]ພຣະຢາເວຈະຊົງຄໍາສາບແຊ່ງມາເຫນືອພວກທ່ານ, ຄວາມສັບສົນ, ແລະທຸກຢ່າງໃນມືຂອງພວກທ່ານ,
ຈົນກວ່າພວກທ່ານຈະຖືກທໍາລາຍແລະຈົນກວ່າພວກທ່ານຈະພິນາດໄປຢ່າງໄວ, ເພາະການເຮັດອັນຊົ່ວຊ້າຂອງພວກທ່ານ,
ທີ່ພວກທ່ານໄດ້ຖິ້ມຂ້ານ້ອຍເສຍ.[21]ພຣະຢາເວຈະເຮັດໃຫ້ມີໂຣກຮ້າຍຕິດຢູ່ກັບພວກທ່ານ
ຈົນກວ່າພຣະອົງຈະຊົງທໍາລາຍພວກທ່ານອອກໄປຈາກດິນແດນນັ້ນທີ່ພວກທ່ານເຂົ້າໄປຍຶດຄອງ.
[22]ພຣະຢາເວຈະຊົງໂຈມຕີພວກທ່ານດ້ວຍໂຣກຕິດເຊື້ອ ດ້ວຍການເປັນໄຂ້, ດ້ວຍການອັກເສບ, ແລະດ້ວຍໄພແລ້ງກັບແຜຜຸພອງ,
ແລະດ້ວຍລົມທີ່ຮ້ອນແຜດເຜົາກັບໂລກເຊື້ອຣາ. ສິ່ງເຫລົ່ານີ້ຈະຕາມທັນພວກທ່ານຈົນກວ່າພວກທ່ານຈະພິນາດ.
[23]ທ້ອງຟ້າທີ່ຢູ່ເຫນືອຫົວຂອງພວກທ່ານຈະເປັນທອງສໍາຣິດ, ແລະແຜ່ນດິນທີ່ຢູ່ພາຍໃຕ້ພວກທ່ານຈະເປັນເຫລັກ.
[24]ພຣະຢາເວຈະຊົງເຮັດໃຫ້ຝົນຂອງແຜ່ນດິນພວກທ່ານເປັນຜົງຝຸ່ນລະອອງ; ມັນຈະຕົກລົງມາຈາກທ້ອງຟ້າເຫນືອພວກທ່ານ,
ຈົນກວ່າພວກທ່ານຈະຖືກທໍາລາຍ.
[25]ພຣະຢາເວຈະເຮັດໃຫ້ພວກທ່ານພ່າຍແພ້ຕໍ່ຫນ້າຕໍ່ຕາສັດຕຣູຂອງພວກທ່ານ;
ພວກທ່ານຈະອອກໄປທາງຫນຶ່ງເພື່ອຕໍ່ສູ້ກັບພວກເຂົາແຕ່ຈະຫນີໄປຕໍ່ຫນ້າຕໍ່ຕາຂອງພວກເຂົາເຈັດທາງ.
ພວກທ່ານຈະຖືກແກ່ງໄປແລະແກ່ງອອກຈາກທ່າມກາງຣາຊອານາຈັກທັງຫມົດເທິງແຜ່ນດິນໂລກນີ້.
[26]ສົບຂອງພວກທ່ານຈະເປັນອາຫານຂອງນົກໃນທ້ອງຟ້າແລະສັດທັງຫລາຍເທິງດິນ; ຈະບໍ່ມີໃຜໄລ່ພວກມັນໄປ.
[27]ພຣະຢາເວຈະຊົງໂຈມຕີພວກທ່ານດ້ວຍຝີມືຂອງອີຢິບແລະດ້ວຍໂຣກ, ແລະດ້ວຍອາການຄັນ, ທີ່ພວກທ່ານບໍ່ສາມາດຮັກສາໃຫ້ຫາຍໄດ້.
[28]ພຣະຢາເວຈະຊົງໂຈມຕີພວກທ່ານດ້ວຍວິຈິດດ້ວຍອາການຕາບອດ, ແລະດ້ວຍການສັບສົນທາງຈິດ.
[29]ພວກທ່ານຈະຕ້ອງລູບຄໍາໄປຕາມທາງໃນຕອນທີ່ມີແສງສະຫວ່າງ, ແລະພວກທ່ານຈະບໍ່ຈະເຣີນຮຸ່ງເຮືອງໃນການໃຊ້ຊີວິດຕ່າງໆ;
ຂອງພວກທ່ານ ພວກທ່ານຈະຖືກກົດຂີ່ແລະຖືກປຸ້ນຢູ່ສະເຫມີ, ແລະຈະບໍ່ມີໃຜຊ່ວຍທ່ານໃຫ້ລອດພົ້ນໄດ້.

30 ພວກທ່ານຫມັ້ນກັບຜູ້ຍິງຄົນຫນຶ່ງ, ແຕ່ຜູ້ຊ່ອຍຄົນຫນຶ່ງຈະຍາດລາວອອກໄປແລະຂົ່ມຂືນນາງ,
ພວກທ່ານຈະສ້າງບ້ານຫລັງຫນຶ່ງແຕ່ຈະບໍ່ໄດ້ອາໄສຢູ່ບ້ານຫລັງນັ້ນ; ພວກທ່ານຈະປູກຜົນອະຫງຸ່ນແຕ່ຈະບໍ່ໄດ້ກິນຜົນຂອງມັນ.
31 ງົວຂອງພວກທ່ານຈະຖືກຂ້າຕໍ່ຫນ້າຕໍ່ຕາພວກທ່ານແຕ່ພວກທ່ານຈະບໍ່ໄດ້ກິນຊີ້ນຂອງມັນ,
ລວາຂອງພວກທ່ານຈະຖືກຍາດຊິງໄປຕໍ່ຫນ້າຕໍ່ຕາພວກທ່ານແລະຈະບໍ່ໄດ້ມັນກັບຄືນມາ,
ແກະຂອງພວກທ່ານຈະຖືກຍົກໃຫ້ສັດຕຣູຂອງພວກທ່ານ, ແລະຈະບໍ່ມີໃຜຊ່ວຍເຫລືອພວກທ່ານ.
32 ລູກຊາຍແລະລູກຍິງຂອງພວກທ່ານທັງຫລາຍຈະຖືກມອບໃຫ້ກັບຊົນຊາດອື່ນໆ; ດວງຕາຂອງພວກທ່ານຈະເບິ່ງເຫັນເຂົາທຸກວັນ,
ແລະລໍຄອຍພວກເຂົາດ້ວຍຄວາມຜິດຫວັງ. ມືຂອງພວກທ່ານຈະບໍ່ມີກຳລັງ.
33 ການເກັບກ່ຽວໃນແຜ່ນດິນຂອງພວກທ່ານແລະການງານຫນັກຂອງພວກທ່ານທັງຫມົດ; ຈະມີຊົນຊາດຫນຶ່ງທີ່ພວກທ່ານບໍ່ຮູ້ຈັກມາກິນພວກມັນ
ພວກທ່ານຈະຖືກກົດຂີ່ຂົ່ມເຫັງ, 34 ພວກທ່ານຈະກາຍເປັນຄົນເສຍຈິດດ້ວຍສິ່ງທີ່ເກີດຂຶ້ນທີ່ພວກທ່ານເຫັນ.
35 ພຣະຢາເວຈະຊົງໂຈມຕີເຂົ່າແລະຂາຂອງພວກທ່ານດ້ວຍຝີທີ່ພວກທ່ານບໍ່ສາມາດຮັກສາໃຫ້ຫາຍໄດ້, ຈາກປາຍຕີນຈົນຮອດຫົວ.
36 ພຣະຢາເວຈະຊົງນຳພວກທ່ານແລະກະສັດທີ່ພວກທ່ານຕັ້ງໄວ້ເຫນືອພວກທ່ານເອງນັ້ນໄປຍັງຊົນຊາດຫນຶ່ງທີ່ທ່ານບໍ່ຮູ້ຈັກ,
ບໍ່ວ່າພວກທ່ານຫລືບັນພະບຸຣຸດຂອງພວກທ່ານ; ທີ່ນັ້ນພວກທ່ານຈະນະມັດສະການພະອື່ນໆ ທີ່ເຮັດຈາກໄມ້ແລະຫີນ.
37 ພວກທ່ານຈະກາຍເປັນທີ່ມາຫນ້າຢ້ານ, ສຸພາສິດບົດຫນຶ່ງ, ແລະຄ້າຄວນຫາ,
ທ່າມກາງປະຊາຊົນທັງຫມົດທີ່ພຣະຢາເວຈະຊົງນຳພວກທ່ານໄປນັ້ນ.
38 ພວກທ່ານຈະເອົາເມັດພືດຫລາຍຊະນິດອອກໄປໃນທົ່ງນາ, ແຕ່ຈະເກັບເມັດພັນມາໄດ້ຫນ້ອຍດຽວ, ເພາະຕັກແຕນທັງຫລາຍຈະມາທຳລາຍ.
39 ພວກທ່ານຈະປູກສວນອະງຸ່ນແຕ່ຈະບໍ່ໄດ້ດື່ມເຫຼົ້າອະງຸ່ນ, ຫລືແມ່ນແຕ່ຫມາກຂອງມັນກໍຈະບໍ່ໄດ້ເກັບ,
ເພາະພວກຫນອນຈະມາກັດກິນພວກມັນ.
40 ພວກທ່ານຈະມີຕົ້ນຫມາກກອກຫລວງຫລາຍໃນອານາເຂດພວກທ່ານ, ແຕ່ພວກທ່ານຈະບໍ່ໄດ້ນ້ຳມັນໃດໆ ມາຮຸກຕົວຂອງພວກທ່ານ,
ເພາະຜົນຂອງຕົ້ນຫມາກກອກຈະຫລົ່ນແລະເນົ່າເສຍ. 41 ພວກທ່ານຈະມີລູກຜູ້ຊາຍແລະຍິງຫລາຍ, ແຕ່ພວກເຂົາຈະບໍ່ອາໄສຢູ່ກັບພວກທ່ານ,
ເພາະພວກເຂົາຈະໄປເປັນຊະເລີຍ.
42 ບັນດາຕົ້ນໄມ້ທັງຫມົດຂອງພວກທ່ານແລະຜົນຈາກດິນຂອງພວກທ່ານຈະຖືກຕັກແຕນທຳລາຍຈົນຫມົດສິ້ນ.
43 ຄົນຕ່າງຊາດທີ່ຢູ່ທ່າມກາງພວກທ່ານ, ຈະລຸກຂຶ້ນສູງເຫນືອພວກທ່ານຫລາຍຂຶ້ນເລື້ອຍໆ 44 ເຂົາຈະເປັນຜູ້ໃຫ້ພວກທ່ານຂໍຢືມ,
ເຂົາຈະເປັນຫົວແລະພວກທ່ານຈະເປັນຫາງ.
45 ຄຳສາບແຊ່ງທັງຫມົດເຫລົ່ານີ້ຈະມາເຫນືອພວກທ່ານແລະຈະຕາມທັນພວກທ່ານຈົນກວ່າພວກທ່ານຈະຖືກທຳລາຍ.
ສິ່ງນີ້ຈະເກີດຂຶ້ນເພາະພວກທ່ານບໍ່ໄດ້ຟັງສຽງພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອຖືຮັກສາບັນຍັດຕ່າງໆ
ຂອງພຣະອົງແລະກົດຂໍ້ບັງຄັບຕ່າງໆຂອງພຣະອົງພຣະອົງໄດ້ຊົງບັນຊາພວກທ່ານ.
46 ຄຳສາບແຊ່ງເຫລົ່ານີ້ຈະຢູ່ເຫນືອພວກທ່ານດັ່ງຫມາຍສຳຄັນແລະການອັດສະຈັນ, ແລະເຫນືອເຊື້ອສາຍທັງຫລາຍຂອງພວກທ່ານເປັນນິດ.
47 ເພາະພວກທ່ານບໍ່ນະມັດສະການພຣະຢາເວພຣະເຈົ້າຂອງພວກທ່ານດ້ວຍຄວາມຊົມຊື່ນຍິນດີແລະດ້ວຍສຸດຈິດສຸດກຳລັງເມື່ອພວກທ່ານຍັງມີຄວາມຈະເຣີນຢູ່ນັ້ນ
48 ດ້ວຍເຫດນີ້ພວກທ່ານຈະຮັບໃຊ້ສັດຕຣູທີ່ພຣະຢາເວສົ່ງມາໂຈມຕີພວກທ່ານ; ພວກທ່ານຈະຮັບໃຊ້ພວກເຂົາດ້ວຍຄວາມຫິວ,
ດ້ວຍການເປືອຍກາຍ, ແລະດ້ວຍຄວາມຍາກຈົນ, ເຂົາຈະວາງແອກເຫລັກໄວ້ເທິງຄໍຂອງພວກທ່ານ, ຈົນກວ່າເຂົາຈະກຳຈັດພວກທ່ານ.
49 ພຣະຢາເວຈະນຳຊົນຊາດຫນຶ່ງມາໂຈມຕີພວກທ່ານຈາກແດນໄກ, ຈາກສຸດປາຍແຜ່ນດິນໂລກ,
ເຫມືອນົກອິນຊີໂຕຫນຶ່ງທີ່ບິນຕົງມາຫາເຫຍື່ອຂອງມັນ, ຊົນຊາດຫນຶ່ງທີ່ພວກທ່ານບໍ່ເຂົ້າໃຈພາສາ; 50 ຊົນຊາດຫນຶ່ງທີ່ມີໃບຫນ້າໂຫດ
ທີ່ເຄົາລົບຄົນມີອາຍຸແລະບໍ່ຖືກກັບຄົນຫນຸ່ມ.
51 ພວກເຂົາຈະກິນລູກອ່ອນຈາກຝູງສັດຂອງພວກທ່ານແລະຜົນຈາກດິນຂອງພວກທ່ານຈົນກວ່າພວກທ່ານຈະຖືກທຳລາຍ,
ພວກເຂົາຈະບໍ່ປະຮວງເຂົ້າໄວ້ໃຫ້ທ່ານເລີຍ, ບໍ່ຖິ້ມເຫລົ້າອາງຸ່ນ, ຫລືນ້ຳມັນເອົາໄວ້, ບໍ່ເຫລືອລູກອ່ອນຈາກຝູງສັດຂອງພວກທ່ານ,
ຈົນພວກເຂົາເຮັດໃຫ້ພວກທ່ານພິນາດ,
52 ພວກເຂົາຈະອ້ອມປະຕູເມືອງທັງຫມົດຂອງພວກທ່ານ, ຈົນກຳແພງສູງແລະປ້ອມຂອງພວກທ່ານພັງທະລາຍ,
ໃນທຸກແຫ່ງຂອງດິນແດນພວກທ່ານກຳແພງຕ່າງໆ
ຈະລົ້ມທະລາຍລົງຈົນຕະຫລອດທົ່ວດິນແດນທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງປະທານໃຫ້ແກ່ພວກທ່ານ.
53 ພວກທ່ານຈະກິນຜົນຈາກຮ່າງກາຍຂອງພວກທ່ານເອງ, ຄືຊີ້ນຂອງລູກຊາຍແລະຍິງຂອງພວກທ່ານ,
ຜູ້ທີ່ພຣະຢາເວພຣະເຈົ້າຂອງພວກທ່ານປະທານໃຫ້ແກ່ພວກທ່ານ,
ໃນການຖືກລ້ອມແລະເປັນທຸກທີ່ພວກສັດຕຣູຂອງພວກທ່ານວາງໄວ້ເຫນືອພວກທ່ານ.
54 ຄົນທີ່ສຸພາບແລະອ່ອນໂຍນໃນທ່າມກາງພວກທ່ານ, ເຂົາຈະກາຍເປັນຄົນອິດສາພີ່ນ້ອງຂອງເຂົາ, ເມຍຜູ້ເປັນທີ່ຮັກຂອງເຂົາ ແລະພວກລູກໆ
ທີ່ເຫລືອຢູ່ກັບເຂົາ. 55 ດັ່ງນັ້ນພວກເຂົາຈະບໍ່ໃຫ້ຊີ້ນລູກຂອງເຂົາເອງທີ່ກຳລັງຈະກິນກັບພວກເຂົາຄົນໃດ,
ເພາະເຂົາຈະບໍ່ມີຫຍັງເຫລືອສຳລັບຕົວເອງໃນການຖືກລ້ອມຮອບແລະເປັນທຸກທີ່ສັດຕຣູຂອງພວກທ່ານຈະວາງໄວ້ເຫນືອພວກທ່ານພາຍໃນປະຕູເມືອງຕ່າງໆຂອງພ
56 ຜູ້ຍິງທີ່ສຸພາບແລະອ່ອນໂຍນໃນທ່າມກາງພວກທ່ານ, ຄືຄົນທີ່ຈະບໍ່ສ່ຽງວາງປາຍຕີນຂອງນາງລົງພື້ນດິນເພື່ອຄວາມອ່ອນໂຍນແລະສຸພາບ,
ນາງຈະກາຍເປັນຄົນທີ່ອິດສາຜູ້ທີ່ເປັນທີ່ຮັກຂອງນາງລູກຊາຍຂອງນາງ, ແລະລູກຜູ້ຍິງຂອງນາງ,
57 ແລະເດັກທີ່ເກີດໃຫມ່ທີ່ອອກມາຈາກວ່າງຂາຂອງນາງ, ແລະລູກໆ ທີ່ນາງໃຫ້ກຳເນີດ.
ນາງຈະກິນພວກເຂົາໃນທີ່ລັບເພາະບໍ່ມີສິ່ງໃດເຫລືອອີກແລ້ວ,
ໃນຊ່ວງການຖືກລ້ອມຮອບແລະເປັນທຸກທີ່ສັດຕຣູຂອງພວກທ່ານຈະວາງໄວ້ເຫນືອພວກທ່ານພາຍໃນປະຕູເມືອງຕ່າງໆ ຂອງພວກທ່ານ.
58 ຖ້າພວກທ່ານບໍ່ຖືຮັກສາຖ້ອຍຄຳທັງຫມົດຂອງກົດຫມາຍນີ້ ທີ່ຖືກບັນທຶກໃນຫນັງສື, ເພື່ອເປັນການຖວາຍກຽດແດ່ ພຣະນາມອັນຊົງຣິດ,
ແລະຫນ້າຢຳເກງນີ້, ຄືພຣະນາມຂອງພຣະຢາເວພຣະເຈົ້າຂອງພວກທ່ານ,

[59]ແລ້ວພຣະຢາເວຈະເຮັດໃຫ້ເກີດໂຣກໄພຕໍ່ບັນດາຄົນເຫລົ່ານັ້ນທີ່ເປັນເຊື້ອສາຍຂອງພວກທ່ານ; ໂຣກລະບາດຈະເກີດຂຶ້ນກັບພວກທ່ານ,
ເປັນເວລາອັນຍາວນານ, ແລະໂຣກໄພທີ່ຮ້າຍແຮງຕ່າງໆ.
[60]ພຣະອົງຈະຊົງນໍາໂຣກໄພຂອງເອຢິບທີ່ພວກທ່ານຢ້ານໃຫ້ພວກທ່ານອີກຄັ້ງຫນຶ່ງ; ພວກມັນຈະຕິດຢູ່ກັບພວກທ່ານ.
[61]ຄວາມເຈັບປ່ວຍທຸກຊະນິດແລະໂຣກລະບາດຮ້າຍແຮງທຸກຊະນິດທີ່ບໍ່ໄດ້ບັນທຶກໄວ້ໃນກົດຫມາຍນີ້, ສິ່ງເຫລົ່ານັ້ນ
ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງນໍາມາເຫນືອພວກທ່ານດ້ວຍຈົນກວ່າພວກທ່ານຈະຖືກທໍາລາຍ.
[62]ພວກທ່ານຈະເຫລືອພຽງຈໍານວນນ້ອຍ, ເຖິງແມ່ນວ່າພວກທ່ານໄດ້ເປັນເຫມືອນດວງດາວໃນທ້ອງຟ້າຈໍານວນຫລວງຫລາຍ,
ເພາະພວກທ່ານບໍ່ຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ.
[63]ເມື່ອພຣະຢາເວໄດ້ຊື່ນຊົມຍິນດີເຫນືອພວກທ່ານໃນການເຮັດສິ່ງດີຕໍ່ພວກທ່ານ, ແລະໃນການທະວີຄູນພວກທ່ານ,
ດັ່ງນັ້ນພຣະອົງຈະຊົງຊົມຊື່ນຍິນດີເຫນືອພວກທ່ານໃນການເຮັດໃຫ້ພວກທ່ານພິນາດແລະໃນການທໍາລາຍພວກທ່ານ,
ພວກທ່ານຈະຖືກຖອນອອກຈາກດິນແດນທີ່ພວກທ່ານຈະໄປຍຶດຄອງນັ້ນ.
[64]ພຣະຢາເວຈະເຮັດໃຫ້ພວກທ່ານກະຈັດກະຈາຍໄປໃນທ່າມກາງປະຊາຊົນທັງຫມົດສຸດປາຍແຜ່ນດິນໂລກຫນຶ່ງໄປຍັງປາຍແຜ່ນດິນໂລກຫນຶ່ງ;
ທີ່ນັ້ນພວກທ່ານຈະນະມັດສະການພະອື່ນໆ, ທີ່ພວກທ່ານບໍ່ຮູ້ຈັກບໍ່ວ່າພວກທ່ານຫລືບັນພະບຸຣຸດຂອງພວກທ່ານ, ພະຕ່າງໆ
ທີ່ເຮັດຈາກໄມ້ແລະຫີນ.
[65]ໃນທ່າມກາງຊົນຊາດຕ່າງໆ ເຫລົ່ານີ້, ພວກທ່ານຈະບໍ່ພົບຄວາມສະດວກ, ແລະຈະບໍ່ຢຸດພັກສໍາລັບປາຍຕີນຂອງພວກທ່ານ;
ແຕ່ພຣະຢາເວຈະປະທານຫົວໃຈທີ່ຫວັ່ນໄຫວ, ດວງຕາທີ່ຜິດຫວັງ, ແລະຈິດໃຈທີ່ໂສກເສົ້າໃຫ້ແກ່ພວກທ່ານທີ່ນັ້ນແທນ.
[66]ຊີວິດຂອງພວກທ່ານຈະຖືກແຂວນໄວ້ໃນຄວາມສັບສົນຕໍ່ຫນ້າຕໍ່ຕາພວກທ່ານ;
ໃນທຸກຄໍ່າຄືນແລະໃນກາງເວັນຈະບໍ່ມີຄວາມແນ່ນອນເລີຍໃນຊີວິດຂອງພວກທ່ານ.
[67]ໃນເວລາເຊົ້າພວກທ່ານຈະເວົ້າວ່າ,
'ຂ້ານ້ອຍປາຖະຫນາໃຫ້ມັນເປັນເວລາຄໍ່າພວກທ່ານຈະເວົ້າວ່າໃຫ້ເປັນເວລາເຊົ້າ!'ເພາະຄວາມຢ້ານກົວໃນໃຈຂອງພວກທ່ານແລະສິ່ງຕ່າງໆ
ທີ່ດວງຕາຂອງພວກທ່ານຈະໄດ້ເບິ່ງເຫັນ.[68]ພຣະຢາເວຈະຊົງນໍາພວກທ່ານເຂົ້າມາອີຢິບອີກຄັ້ງໂດຍທາງເຮືອ,
ໂດຍເສັ້ນທາງທີ່ຂ້ານ້ອຍໄດ້ກ່າວໄວ້ກັບພວກທ່ານ, 'ພວກທ່ານຈະບໍ່ໄດ້ເຫັນອີຢິບອີກ,
ທີ່ນັ້ນພວກທ່ານຈະຂະຫຍາຍຕົວເອງໃຫ້ກັບພວກສັດຕຣູຂອງພວກທ່ານໃຫ້ເປັນທາດຊາຍແລະທາດຍິງ, ແຕ່ຈະບໍ່ມີໃຜຊື້ພວກທ່ານໄດ້.'

29 [1]ເຫລົ່ານີ້ຄືຖ້ອຍຄໍາຕ່າງໆ ທີ່ພຣະຢາເວໄດ້ຊົງບັນຊາໂມເຊໃຫ້ບອກກັບປະຊາຊົນອິສະຣາເອນໃນດິນແດນໂມອາບ,
ຖ້ອຍຄໍາຕ່າງໆທີ່ເພີ່ມຈາກພັນທະສັນຍາທີ່ພຣະອົງໄດ້ເຮັດກັບເຮົາທີ່ໂຮເຣັບ.

[2]ໂມເຊໄດ້ເອີ້ນຊາວອິສະຣາເອນທັງຫມົດແລະເວົ້າກັບພວກເຂົາວ່າ,"
ພວກທ່ານໄດ້ເບິ່ງເຫັນສິ່ງທີ່ພຣະຢາເວຊົງເຮັດຕໍ່ຫນ້າຕໍ່ຕາຂອງພວກທ່ານໃນດິນແດນອີຢິບຕໍ່ຟາໂຣ, ຕໍ່ທາດທັງຫມົດຂອງເຂົາ,
ແລະຕໍ່ດິນແດນຂອງເຂົາທັງຫມົດ-[3]ຄືການທົນທຸກຢ່າງຍິ່ງໃຫຍ່, ທີ່ດວງຕາຂອງເຂົາໄດ້ເຫັນຫມາຍສໍາຄັນຕ່າງໆ,
ແລະການອັດສະຈັນຍິ່ງໃຫຍ່ຕ່າງໆ ເຫລົ່ານັ້ນ.[4]ແຕ່ຈົນເຖິງວັນນີ້ພຣະຢາເວໄດ້ປະທານໃຈທີ່ຮູ້ດວງຕາທີ່ເບິ່ງເຫັນ, ຫູທີ່ຈະໄດ້ຍິນ,
ໃຫ້ແກ່ພວກທ່ານ.
[5]ເຮົາໄດ້ນໍາພວກເຈົ້າມາເປັນເວລາສີ່ສິບປີໃນຖິ່ນທຸລະກັນດານ; ເສື້ອຜ້າຂອງພວກເຂົາກໍ່ຂາດ, ແລະເກີບຂອງເຂົາກໍ່ຈີກໄປ.
[6]ພວກເຈົ້າຈະບໍ່ກິນເຂົ້າຈີ່ໃດໆ ແລະພວກເຈົ້າຈະບໍ່ດື່ມເຫລົ້າອະງຸ່ນໃດໆ, ຫລືເຫລົ້າອື່ນໆ,
ເພື່ອວ່າພວກເຈົ້າຈະຮູ້ວ່າເຮົາເປັນພຣະຢາເວພຣະເຈົ້າຂອງພວກເຈົ້າ.
[7]ເມື່ອພວກເຈົ້າມາເຖິງສະຖານທີ່ແຫ່ງນີ້, ສີໂຫນແຫ່ງນະຄອນເຮັດສະໂບນ, ແລະໂອກ, ເຈົ້າກະສັດແຫ່ງນະຄອນບາຊານ,
ໄດ້ຍົກທັບມາສູ້ຮົບພວກເຮົາ, ແລະເຮົາເຮັດໃຫ້ເຂົາພ່າຍແພ້.
[8]ພວກເຮົາໄດ້ຍຶດດິນແດນຂອງພວກເຂົາແລະມອບມັນໃຫ້ເປັນມໍລະດົກແກ່ຄົນເຜົ່າຣູເບັນ, ແກ່ຄົນເຜົ່າກາດ,
ແລະແກ່ຄົນເຜົ່າມານາເຊເຄິ່ງເຜົ່າ.[9]ດ້ວຍເຫດນີ້ຈຶ່ງຮັກສາຖ້ອຍຄໍາຕ່າງໆ ຂອງພັນທະສັນຍານີ້ແລະເຮັດຕາມ, ເພື່ອພວກທ່ານຈະ
ຈະເຣີນຮຸ່ງເຮືອງໃນສິ່ງທີ່ພວກທ່ານເຮັດ.
[10]ວັນນີ້, ພວກທ່ານກໍາລັງຢືນຊ້ອງຫນ້າພຣະຢາເວພຣະເຈົ້າຂອງພວກທ່ານ, ພວກທ່ານທັງຫມົດ,
ບໍ່ວ່າຈະເປັນພວກຫົວຫນ້າທັງຫມົດຂອງພວກທ່ານ, ເຜົ່າ ຕ່າງໆ ຂອງພວກທ່ານ, ບັນດາຜູ້ໃຫຍ່ຂອງພວກທ່ານ,
ແລະບັນດານາຍທະຫານຂອງພວກທ່ານ ຄືຜູ້ຊາຍທັງຫມົດຂອງອິສະຣາເອນ,[11]ບັນດາລູກນ້ອຍຂອງພວກທ່ານ, ພວກເມຍຂອງພວກທ່ານ,
ແລະຄົນຕ່າງຊາດທີ່ອາໄສຢູ່ທ່າມກາງພວກທ່ານ, ໃນຄ້າຍຂອງພວກທ່ານ, ທີ່ຕັດຟືນແລະຫາບນ້ໍາໃຫ້ແກ່ພວກທ່ານ.
[12]ພວກທ່ານຢູ່ທີ່ນີ້ເພື່ອເຂົ້າສູ່ພັນທະສັນຍາຂອງພຣະຢາເວພຣະເຈົ້າຂອງພວກທ່ານແລະເຂົ້າສູ່ຄໍາສັນຍາທີ່ພຣະຢາເວພຣະເຈົ້າຂອງພວກທ່ານກໍາລັງສັນຍາກັບພວກ
[13]ເພື່ອວ່າໃນວັນນີ້ ພຣະອົງຈະເຮັດໃຫ້ພວກທ່ານເຂົ້າສູ່ການເປັນປະຊາຊົນຂອງພຣະອົງ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ກັບພວກທ່ານ,
ແລະຕາມທີ່ພຣະອົງໄດ້ຊົງສັນຍາກັບບັນດາບັນພະບຸຣຸດຂອງພວກທ່ານ, ຄືແກ່ອັບຣາຮາມ, ອີຊາກ, ແລະຢາໂຄບ.
[14]ເພາະບໍ່ແມ່ນພຽງແຕ່ພວກທ່ານເທົ່ານັ້ນທີ່ເຮົາກໍາລັງເຮັດພັນທະສັນຍານີ້
ແລະຄໍາສັນຍານີ້-[15]ຄືທຸກຄົນທີ່ກໍາລັງຢືນຢູ່ທີ່ນີ້ກັບພວກເຮົາໃນວັນນີ້ຕໍ່ພຣະພັກຂອງພຣະຢາເວພຣະເຈົ້າຂອງພວກເຮົາ-
ແຕ່ກັບຄົນເຫລົ່ານັ້ນທີ່ບໍ່ໄດ້ຢູ່ກັບພວກເຮົາໃນວັນນີ້ດ້ວຍ.[16]ພວກທ່ານໄດ້ຮູ້ວິທີທີ່ພວກເຮົາອາໄສຢູ່ໃນດິນແດນອີຢິບ,
ແລະການທີ່ເຮົາໄດ້ຜ່ານທ່າມກາງຊົນຊາດຕ່າງໆ ຕາມທີ່ພວກເຂົາໄດ້ຜ່ານມານັ້ນ.
[17]ພວກທ່ານໄດ້ເບິ່ງເຫັນສິ່ງທີ່ຫນ້າກຽດຄືພະເຫລົ່ານັ້ນ: ທີ່ພວກເຂົາໄດ້ສ້າງມັນຂຶ້ນດ້ວຍ ໄມ້, ຫີນ, ເງິນ, ຄໍາ, ທີ່ຢູ່ທ່າມກາງພວກເຂົາ.
[18]ຈົ່ງແນ່ໃຈວ່າບໍ່ມີສິ່ງນີ້ໃນທ່າມກາງພວກທ່ານ ຄືຜູ້ຊາຍ, ຜູ້ຍິງ, ຄອບຄົວຫລືເຜົ່າໃດໆ, ທີ່ວັນນີ້ໃຈຂອງເຂົາໄດ້ຫັນໄປຈາກພຣະຢາເວ
ພຣະເຈົ້າຂອງເຮົາ, ເພື່ອໄປນະມັດສະການພະອື່ນ ຂອງຊົນຊາດຕ່າງໆ ເຫລົ່ານັ້ນ.
ຈົ່ງແນ່ໃຈວ່າຢູ່ທ່າມກາງພວກທ່ານບໍ່ມີຮາກທີ່ມີຄວາມຂົມຂື່ນແລະເປັນພິດ.[19]ເມື່ອຄົນເຫລົ່ານັ້ນໄດ້ຍິນຖ້ອຍຄໍາແຫ່ງຄໍາສາບແຊ່ງຕ່າງໆນີ້,
ເຂົາຈະອວຍພອນຕົວເອງໃນໃຈວ່າ, "ຂ້ານ້ອຍມີສັນຕິສຸກເຖິງແມ່ນວ່າຂ້ານ້ອຍມີຄວາມດື້ ທີ່ຢູ່ໃນໃຈຂອງຂ້ານ້ອຍ,
"ສິ່ງນີ້ຈະທໍາລາຍທັງສິ່ງທີ່ປຽກແລະແຫ້ງໄປພ້ອມໆ ກັນ.
[20]ພຣະຢາເວຈະບໍ່ຊົງຍົກໂທດໃຫ້ແກ່ເຂົາ, ແຕ່ພິໂຣດຂອງພຣະຢາເວແລະຄວາມຫຶງຫວງຂອງພຣະອົງຈະຟຸ້ງຂຶ້ນໂຈມຕີເຂົາແທນ,
ແລະຄໍາສາບແຊ່ງທັງຫມົດທີ່ບັນທຶກໄວ້ໃນຫນັງສືນີ້ຈະມາເຫນືອເຂົາ, ແລະພຣະຢາເວຈະລົບຊື່ຂອງພວກເຂົາອອກໄປຈາກພາຍໃຕ້ທ້ອງຟ້ານີ້.
[21]ພຣະຢາເວຈະແຍກເຂົາອອກຈາກເຜົ່າທັງຫມົດຂອງອິສະຣາເອນ, ເພື່ອຄວາມພິນາດ,
ເພື່ອຮັກສາຄໍາສາບແຊ່ງທັງຫມົດຂອງພັນທະສັນຍາທີ່ຖືກບັນທຶກໄວ້ໃນຫນັງສືແຫ່ງພັນທະສັນຍານີ້.
[22]ຄົນລຸ້ນນັ້ນຈະມາເຖິງ, ຄືພວກລູກຫລານທີ່ເຕີບໂຕນັ້ນມາຫລັງຈາກພວກທ່ານ, ແລະຄົນຕ່າງຊາດທີ່ມາຈາກດິນແດນຫ່າງໄກ,
ຈະເວົ້າເມື່ອພວກເຂົາເຫັນໄພພິບັດຕ່າງໆ
ທີ່ພຣະຢາເວໄດ້ເຮັດໃຫ້ປ່ວຍນັ້ນ-[23]ແລະເມື່ອພວກເຂົາເບິ່ງເຫັນວ່າດິນແດນທັງຫມົດໄດ້ກາຍເປັນກໍາມະຖັນ, ແລະເກືອທີ່ຖືກເຜົາໄຟ
ຊຶ່ງບໍ່ມີການວ່ານຫລືການອອກຜົນບໍ່ມີການປູກຜັກເຫມືອນການຖືກທໍາລາຍ, ຂອງໂສດົມ ໂກໂມຣາ, ເມືອງອັດມາ, ແລະເຊໂບີອິມ,
ທີ່ພຣະຢາເວໄດ້ທໍາລາຍດ້ວຍຄວາມພິໂຣດຂອງພຣະອົງ-[24]ພວກເຂົາຈະເວົ້າພ້ອມກັນກັບຊົນຊາດອື່ນໆ ທັງຫມົດວ່າ,
"ເປັນຫຍັງພຣະຢາເວຈຶ່ງເຮັດສິ່ງນີ້ຕໍ່ດິນແດນນີ້? ພິໂຣດອັນຮຸນແຮງນີ້ຫມາຍຄວາມວ່າແນວໃດ?'
[25]ແລ້ວປະຊາຊົນຈະເວົ້າວ່າ, "ເພາະພວກເຂົາໄດ້ຖິ້ມພັນທະສັນຍາຂອງພຣະຢາເວ, ພຣະເຈົ້າຂອງບັນພະບຸຣຸດຂອງພວກເຂົາ,
ທີ່ພຣະອົງໄດ້ຊົງເຮັດກັບເຂົາເມື່ອພຣະອົງໄດ້ນໍາເຂົາອອກມາຈາກອີຢິບ,[26]ແລະເພາະເຂົາໄດ້ຮັບໃຊ້ພະອື່ນໆ ແລະໄດ້ກົ້ມກາບຕໍ່ພະເຫລົ່ານັ້ນ,
ພະອື່ນໆ ທີ່ພວກເຂົາບໍ່ຮູ້ຈັກແລະທີ່ພຣະອົງບໍ່ໄດ້ປະທານໃຫ້ແກ່ພວກເຂົາ.
[27-28]ດ້ວຍເຫດນີ້ພິໂຣດຂອງພຣະຢາເວພຣະເຈົ້າຂອງພວກທ່ານຈຶ່ງຟຸ້ງຂຶ້ນໂຈມຕີດິນແດນນີ້,
ເພື່ອນໍາຄໍາສາບແຊ່ງທັງຫມົດໃນຫນັງສືມາຍັງດິນແດນນີ້. ພຣະຢາເວໄດ້ຖອນຮາກຂອງເຂົາອອກຈາກດິນແດນຂອງພວກເຂົາ,
ດ້ວຍຄວາມພິໂລດ, ແລະເຮັດໃຫ້ເຂົາໄປອີກດິນແດນຫນຶ່ງ, ດັ່ງເຊັ່ນທຸກວັນນີ້".
[29]ສິ່ງລີ້ລັບເປັນຂອງພຣະຢາເວພຣະເຈົ້າຂອງເຮົາພຽງຜູ້ດຽວ; ແຕ່ສິ່ງຕ່າງໆ ທີ່ຖືກສໍາແດງນັ້ນເປັນຂອງພວກເຮົາ
ແລະເຊື້ອສາຍຂອງພວກເຮົາເປັນນິດ, ເພື່ອພວກເຮົາຈະເຮັດຕາມຖ້ອຍຄໍາທັງຫມົດຂອງກົດຫມາຍນີ້.

 generated on Tue Jun 17 19:01:42 2025

30 [1]ເມື່ອສິ່ງທັງປວງເຫລົ່ານີ້ໄດ້ມາເຫນືອພວກທ່ານ, ຄືພຣະພອນຕ່າງໆ ແລະຄຳສາບແຊ່ງຕ່າງໆ ທີ່ຂ້ານ້ອຍໄດ້ຕັ້ງເອົາໄວ້ຕໍ່ຫນ້າພວກທ່ານ,
ແລະເມື່ອພວກທ່ານລະນຶກເຖິງສິ່ງເຫລົ່ານີ້ໃນທ່າມກາງຊົນຊາດອື່ນໆ ທັງຫມົດໄດ້ຊົງຂັບໄລ່ພວກທ່ານໄປນັ້ນ,[2]ແລະ
ເມື່ອພວກທ່ານຫັນມາຫາພຣະຢາເວພຣະເຈົ້າຂອງພວກທ່ານ, ແລະເຊື່ອຟັງສຽງຂອງພຣະອົງ,
ເຮັດຕາມທຸກສິ່ງທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້, ທັງພວກທ່ານແລະລູກຫລານຂອງພວກທ່ານ, ດ້ວຍສຸດຈິດສຸດໃຈຂອງພວກທ່ານ,
ແລະ ດ້ວຍສິ້ນສຸດໃຈຂອງພວກທ່ານ,[3]ເມື່ອພຣະຢາເວພຣະເຈົ້າຂອງພວກທ່ານຊົງນຳພວກທ່ານ;
ກັບມາຈາກການເປັນຊະເລີຍແລະຊົງມີຄວາມສົງສານພວກທ່ານ
ພຣະອົງຈະຫັນກັບແລະຮວບຮວມທ່ານຈາກປະຊາຊົນທັງຫມົດທີ່ພຣະຢາເວພຣະເຈົ້າຂອງພວກທ່ານກະຈັດກະຈາຍໄປນັ້ນ.

[4]ຖ້າຫາກຄົນໃດໃນພວກທ່ານທີ່ຢູ່ທ່າມກາງປະຊາຊົນທີ່ຖືກຂັບໄລ່ໄປຍັງສະຖານທີ່ອັນໄກພາຍໃຕ້ທ້ອງຟ້ານີ້,
ຈາກທີ່ນັ້ນພຣະຢາເວພຣະເຈົ້າຂອງພວກທ່ານ, ຈະຮວບຮວມພວກທ່ານມາ ແລະຈາກທີ່ນັ້ນພຣະອົງຈະຊົງນຳພວກທ່ານມາ.
[5]ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງນຳພວກທ່ານ, ເຂົ້າໄປຍັງດິນແດນທີ່ບັນດາບັນພະບຸຣຸດພວກທ່ານເຄີຍຄອບຄອງດິນແດນນັ້ນອີກຄັ້ງ;
ພຣະອົງຈະຊົງເຮັດສິ່ງດີໃຫ້ແກ່ພວກທ່ານ
ແລະຈະທະວີຄູນພວກທ່ານຫລາຍຂຶ້ນກວ່າທີ່ພຣະອົງໄດ້ຊົງເຮັດກັບບັນດາບັນພະບຸຣຸດຂອງພວກທ່ານ.
[6]ພຣະຢາເວພຣະເຈົ້າຂອງພວກທ່ານຈະໃຫ້ພວກທ່ານແລະເຊື້ອສາຍຂອງພວກທ່ານມີໃຈເຊື່ອຟັງວ່າ,
ຈະຮັກພຣະຢາເວພຣະເຈົ້າຂອງພວກທ່ານດ້ວຍສິ້ນສຸດໃຈ, ແລະດ້ວຍສິ້ນສຸດຈິດຂອງພວກທ່ານເພື່ອວ່າພວກທ່ານຈະມີຊີວິດຢູ່.
[7]ພຣະຢາເວພຣະເຈົ້າຂອງພວກທ່ານຈະເອົາຄຳສາບແຊ່ງທັງຫມົດເຫລົ່ານີ້ໃສ່ເຫນືອສັດຕຣູຂອງພວກທ່ານ,
ແລະເຫນືອຄົນເຫລົ່ານັ້ນທີ່ກຽດຊັງທ່ານ, ຄືຄົນເຫລົ່ານັ້ນທີ່ໄດ້ຂົ່ມເຫັງພວກທ່ານ.[8]ພວກທ່ານຈະຫັນກັບແລະເຊື່ອຟັງສຽງຂອງພຣະຢາເວ,
ແລະພວກທ່ານຈະເຮັດຕາມບັນຍັດທຸກປະການຂອງພຣະອົງທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້.
[9]ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງເຮັດໃຫ້ພວກທ່ານອຸດົມສົມບູນໃນການງານທຸກຢ່າງທີ່ມືຂອງພວກທ່ານເຮັດ,
ໃນຜົນແຫ່ງຮ່າງກາຍຂອງພວກທ່ານ, ໃນຜົນແຫ່ງຝູງສັດຂອງພວກທ່ານ, ໃນຜົນແຫ່ງດິນຂອງພວກທ່ານ, ເພື່ອຄວາມຈະເຣີນຮຸ່ງເຮືອງ,
ເພາະພຣະຢາເວຊົງດີໃຈເຫນືອພວກທ່ານອີກຄັ້ງຫນຶ່ງເພາະຄວາມຈະເຣີນຮຸ່ງເຮືອງ,
ເຫມືອນກັບທີ່ພຣະອົງໄດ້ຍິນດີເຫນືອບັນດາບັນພະບຸຣຸດຂອງພວກທ່ານ.
[10]ພຣະອົງຈະຊົງເຮັດສິ່ງນີ້ຖ້າຫາກພວກທ່ານຈະເຊື່ອຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອຖືຮັກສາບັນຍັດຕ່າງໆ ຂອງພຣະອົງ,
ທີ່ຖືກບັນທຶກໄວ້ໃນຫນັງສືແຫ່ງກົດບັນຍັດນີ້,
ຖ້າພວກທ່ານຫັນມາຫາພຣະຢາເວພຣະເຈົ້າຂອງພວກທ່ານດ້ວຍສິ້ນສຸດໃຈແລະດ້ວຍສິ້ນສຸດຈິດຂອງພວກທ່ານ.
[11]ເພາະພຣະບັນຍັດນີ້ທີ່ຂ້ານ້ອຍກຳລັງບັນຊາພວກທ່ານໃນວັນນີ້ບໍ່ໄດ້ຍາກສຳລັບພວກທ່ານ, ຫລືບໍ່ໄດ້ໄກເກີນກວ່າພວກທ່ານຈະເອື້ອມເຖິງໄດ້.
[12]ມັນບໍ່ໄດ້ຢູ່ທ້ອງຟ້າ, ທີ່ພວກທ່ານຈະຕ້ອງກ່າວວ່າ,
"ໃຜຈະຂຶ້ນໄປເທິງທ້ອງຟ້າເພື່ອພວກເຮົາແລະນຳມັນລົງມາໃຫ້ພວກເຮົາແລະເຮັດໃຫ້ພວກເຮົາໄດ້ຍິນສິ່ງເຫລົ່ານັ້ນເພື່ອຈະໃຫ້ເຮົາເຮັດຕາມໄດ້ບໍ?"
[13]ຫລືມັນບໍ່ໄດ້ຢູ່ອີກຟາກຂອງທະເລ, ທີ່ພວກທ່ານຈະຕ້ອງກ່າວ, "ໃຜຈະຂ້ວາມທະເລໄປເພື່ອເຮົາແລະນຳມັນມາໃຫ້ ເຮົາໄດ້ຍິນສິ່ງນັ້ນ,
ເພື່ອພວກເຮົາຈະເຮັດຕາມໄດ້ບໍ?"[14]ຖ້ອຍຄຳນັ້ນຢູ່ໃກ້ພວກທ່ານຢ່າງຫລາຍ, ຢູ່ໃນປາກ ແລະຢູ່ໃນຫົວໃຈຂອງພວກທ່ານ,
ເພື່ອພວກທ່ານຈະເຮັດຕາມຖ້ອຍຄຳນັ້ນໄດ້.
[15]ເບິ່ງສາວັນນີ້ຂ້ານ້ອຍໄດ້ວາງໄວ້ຕໍ່ຫນ້າຂອງພວກທ່ານ ຄືຊີວິດກັບສິ່ງດີ, ກັບຄວາມຕາຍແລະສິ່ງຊົ່ວຮ້າຍ.
[16]ຖ້າຫາກພວກທ່ານເຊື່ອຟັງກົດເກນຕ່າງໆຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ດັ່ງທີ່ຂ້ານ້ອຍໄດ້ບັນຊາພວກທ່ານໃນວັນນີ້ຮັກພຣະຢາເວພຣະເຈົ້າຂອງພວກທ່ານ, ໃຫ້ເດີນຕາມທາງທັງຫມົດຂອງພຣະອົງ,
ແລະຖືຮັກສາບັນຍັດຕ່າງໆ ຂອງພຣະອົງ, ຂໍ້ບັງຄັບຕ່າງໆ ຂອງພຣະອົງ, ແລະກົດຫມາຍຕ່າງໆຂອງພຣະອົງ, ທ່ານຈະມີຊີວິດແລະທະວີຄູນ,
ແລະພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງອວຍພອນພວກທ່ານໃນດິນແດນທີ່ພວກທ່ານກຳລັງຈະເຂົ້າໄປຍຶດຄອງນັ້ນ.
[17]ແຕ່ຖ້າຈິດໃຈຂອງພວກທ່ານຫັນໄປເສຍ, ແລະພວກທ່ານບໍ່ຟັງແຕ່ກັບອອກຫ່າງແລະກົ້ມກາບຕໍ່ພະອື່ນໆແລະນະມັດສະການພະເຫລົ່ານັ້ນ,
[18]ແລ້ວຂ້ານ້ອຍຂໍປະກາດກັບພວກທ່ານໃນວັນນີ້ວ່າ: ພວກທ່ານຈະພິນາດຢ່າງແນ່ນອນ
ພວກທ່ານຈະບໍ່ມີຊີວິດຍືນຍາວໃນດິນແດນທີ່ພວກທ່ານກຳລັງຈະຂ້ວາມໄປແມ່ນ້ຳຈໍແດນເພື່ອເຂົ້າໄປແລະຢຶດຄອງນັ້ນ.
[19]ຂ້ານ້ອຍຈະເອີ້ນທ້ອງຟ້າແລະແຜ່ນດິນເປັນພະຍານຕໍ່ສູ້ພວກທ່ານໃນວັນນີ້ວ່າ ຂ້ານ້ອຍໄດ້ຕັ້ງໄວ້ຕໍ່ຫນ້າພວກທ່ານຄືຊີວິດແລະຄວາມຕາຍ,
ພຣະພອນແລະຄຳສາບແຊ່ງ; ດ້ວຍເຫດນີ້ຈົ່ງເລືອກຊີວິດເພື່ອວ່າທ່ານຈະມີຊີວິດຢູ່, ພວກທ່ານແລະເຊື້ອສາຍຂອງພວກທ່ານ.
[20]ຈົ່ງເຮັດສິ່ງນີ້ເພື່ອເປັນການຮັກພຣະຢາເວພຣະເຈົ້າຂອງພວກທ່ານ, ເພື່ອເຊື່ອຟັງສຽງຂອງພຣະອົງ,
ແລະເພື່ອຜູກພັນກັບພຣະອົງພຣະອົງຄືຊີວິດຂອງພວກທ່ານແລະຊົງເປັນວັນເວລາທີ່ຍືນຍາວຂອງພວກທ່ານ,
ຈົ່ງເຮັດສິ່ງນີ້ເພື່ອວ່າພວກທ່ານຈະມີຊີວິດໃນດິນແດນພຣະຢາເວທີ່ໄດ້ຊົງສັນຍາຈະປະທານແກ່ບັນພະບຸຣຸດຂອງພວກທ່ານ, ຄືແກ່ອັບຣາຮາມ,
ແກ່ອີຊາກ, ແລະແກ່ຢາໂຄບ".

31 [1]ໂມເຊໄດ້ໄປແລະກ່າວຖ້ອຍຄຳເຫລົ່ານັ້ນຕໍ່ອິສະຣາເອນທັງຫມົດ.[2]ເຂົາເວົ້າກັບອິສະຣາເອນວ່າ,
"ບັດນີ້ຂ້ານ້ອຍອາຍຸຫນຶ່ງຮ້ອຍຊາວປີແລ້ວ; ຂ້ານ້ອຍບໍ່ສາມາດອອກແລະເຂົ້າມາໄດ້ອີກ; ພຣະຢາເວໄດ້ກ່າວແກ່ຂ້ານ້ອຍວ່າ,
"ເຈົ້າຈະບໍ່ໄດ້ຂ້າມແມ່ນ້ຳຈໍແດນ".[3]ພຣະອົງຈະຊົງຂ້າມໄປ ກ່ອນຫນ້າພວກທ່ານ, ພຣະອົງຈະຊົງທຳລາຍຊົນຊາດຕ່າງໆ
ເຫລົ່ານັ້ນໃຫ້ພົ້ນຈາກພວກທ່ານ, ແລະພຣະອົງຈະຊົງຂັບໄລ່ພວກທ່ານອອກໄປ. ໂຢຊວຍ, ຈະຂ້າມໄປກ່ອນຫນ້າພວກທ່ານ,
ຕາມທີ່ພຣະຢາເວກ່າວນັ້ນ.

[4]ພຣະຢາເວໄດ້ເຮັດກັບເຂົາດັ່ງທີ່ໄດ້ຊົງເຮັດຕໍ່ສີໂຫນ ແລະຕໍ່ໂອກ, ພວກກະສັດຂອງຄົນອາໂມຣິດ, ແລະຕໍ່ດິນແດນຂອງພວກເຂົາ,
ທີ່ພຣະອົງໄດ້ທຳລາຍ. [5]ພຣະຢາເວ ຈະຊົງປະທານໄຊຊະນະເຫນືອພວກເຂົາໃຫ້ພວກທ່ານເມື່ອພວກທ່ານອອກສົງຄາມ,
ແລະພວກທ່ານຈະເຮັດກັບເຂົາທຸກຢ່າງຕາມທີ່ຂ້ານ້ອຍໄດ້ບັນຊາພວກທ່ານ.[6]ຈົ່ງເຂັ້ມແຂງແລະມີຄວາມກ້າຫານ ຈົ່ງຢ່າຢ້ານກົວຕໍ່ພວກເຂົາ,
ເພາະພຣະຢາເວພຣະເຈົ້າຂອງພວກທ່ານ, ພຣະອົງຄືຜູ້ທີ່ໄປກັບພວກທ່ານ ແລະບໍ່ເຮັດໃຫພວກທ່ານຜິດຫວັງຫລືຊົງຖິ້ມພວກທ່ານ.
[7]ໂມເຊໄດ້ເອີ້ນໂຢຊວຍເຂົ້າມາຫາແລະເວົ້າກັບເຂົາຕໍ່ຫນ້າປະຊາຊົນອິສະຣະເອນທັງຫມົດວ່າ, "ຈົ່ງເຂັ້ມແຂງແລະກ້າຫານເຖີດ,
ເພາະພວກທ່ານຈະກັບໄປກັບປະຊາຊົນນີ້ໃນດິນແດນທີ່ພຣະຢາເວຊົງສັນຍາກັບບັນພະບຸຣຸດຂອງພວກເຂົາວ່າຈະປະທານໃຫ້ພວກເຂົາ;
ທ່ານຈະເຮັດໃຫ້ເຂົາໄດ້ຮັບດິນແດນນັ້ນເປັນມໍຣະດົກ.[8]ພຣະອົງຄືຜູ້ທີ່ນຳຫນ້າໄປ ພຣະອົງຈະຊົງຢູ່ກັບພວກທ່ານ
ພຣະອົງບໍ່ໃຫ້ທ່ານຜິດຫວັງຫລືຊົງຖິ້ມທ່ານ ຢ່າຢ້ານຢ່າທໍ້ຖອຍເລີຍ.
[9]ໂມເຊໄດ້ຂຽນກົດຫມາຍນີ້ແລະໄດ້ມອບໃຫ້ກັບບັນດາປະໂລຫິດ, ບັນດາລູກຊາຍຂອງຄົນເລວີ, ຜູ້ທີ່ໄດ້ຫາມຫີບພັນທະສັນຍາຂອງພຣະຢາເວ;
ພຣະອົງໄດ້ປະທານສຳເນົາຕ່າງໆ ຂອງພັນທະສັນຍານັ້ນໃຫ້ບັນດາຜູ້ປົກຄອງຂອງຊາວອິສະຣາເອນດ້ວຍ.
[10]ໂມເຊໄດ້ບັນຊາພວກທ່ານແລະເວົ້າວ່າ,"ເມື່ອເຖິງທ້າຍເດືອນຂອງທຸກເຈັດປີ, ເວລານັ້ນ,
ເປັນເວລາແກ້ໄຂເພື່ອຍົກເລີກສັນຍາຫນີ້ຕ່າງໆລະຫວ່າງເທສະການຢູ່ໄພ[11]ເມື່ອຊາວອິສະຣາເອນທັງຫມົດໄດ້ມາປະກົດໄດ້ຕົວຕໍ່ຫນ້າພຣະຢາເວພຣະເຈົ້າຂອງພວກ
ທີ່ພຣະອົງຈະຊົງເລືອກໃຫ້ເປັນສະຖານທີ່ນະມັດສະການພຣະອົງ,
ພວກທ່ານຈະອ່ານກົດຫມາຍນີ້ຕໍ່ຫນ້າຄົນອິສະຣາເອນທັງຫມົດເພື່ອໃຫ້ພວກເຂົາໄດ້ຍິນ.
[12]ທີ່ຊຸມນຸມຂອງປະຊາຊົນ, ພວກຜູ້ຊາຍ, ແລະຜູ້ຍິງ, ແລະເດັກນ້ອຍໆ, ແລະຄົນຕ່າງຊາດທີ່ຢູ່ພາຍໃນປະຕູເມືອງຂອງພວກທ່ານ,
ເພື່ອວາພວກເຂົາຈະໄດ້ຍິນແລະຮຽນຮູ້, ແລະເພື່ອພວກເຂົາຖວາຍກຽດພຣະຢາເວພຣະເຈົ້າຂອງພວກທ່ານ,
ແລະຖືຮັກສາຖ້ອຍຄຳທັງຫມົດຂອງກົດຫມາຍນີ້.[13]ຈົ່ງເຮັດສິ່ງນີ້ເພື່ອວ່າລູກຫລານຂອງເຂົາທັງຫລາຍ,
ຄືຜູ້ທີ່ບໍ່ໄດ້ຮູ້ແລະໄດ້ຍິນຮຽນຮູ້ທີ່ຈະຖວາຍກຽດແດ່ພຣະຢາເວພຣະເຈົ້າຂອງພວກທ່ານ, ໃນຂະນະທີ່ພວກທ່ານມີຊີວິດຢູ່ໃນດິນແດນ
ພວກທ່ານກຳລັງຂ້າມໄປແມ່ນ້ຳຈໍແດນໄປຍຶດຄອງນັ້ນ.
[14]ພຣະຢາເວກ່າວແກ່ໂມເຊວ່າ, "ຈົ່ງເບິ່ງ ວັນນັ້ນກຳລັງມາເຖິງເມື່ອທ່ານຕ້ອງຕາຍ; ຈົ່ງເອີ້ນໂຢຊວຍແລະພວກເຈົ້າຕ້ອງຢູ່ເຕັນນັດພົບ,
ເພື່ອວ່າເຮົາຈະມອບບັນຍັດຢ່າງຫນຶ່ງໃຫ້ແກ່ພວກເຂົາ". ໂມເຊແລະໂຢຊວຍໄດ້ໄປແລະໄດ້ຢູ່ໃນເຕັນນັດພົບ.
[15]ພຣະຢາເວໄດ້ຊົງປະກາດໃນເຕັນເສົາເມກ; ເສົາເມກທີ່ຕັ້ງຢູ່ເຫນືອປະຕູທາງເຂົ້າຂອງເຕັນ.
[16]ພຣະຢາເວໄດ້ກ່າວກັບໂມເຊວ່າ, "ເບິ່ງສາ, ເຈົ້າຈະລ່ວງລັບໄປກັບບັນພະບຸຣຸດຂອງພວກເຈົ້າ;
ປະຊາຊົນຈະລຸກຂຶ້ນແລະເຮັດຄືຍິງໂສເພນີໄລ່ຕາມພະແປກຫນ້າ ທັງຫລາຍທີ່ຢູ່ທ່າມກາງພວກເຂົາໃນດິນແດນທີ່ພວກເຂົາກຳລັງເຂົ້າໄປ.
ພວກເຂົາໄດ້ຖິ້ມເຮົາແລະທຳລາຍພັນທະສັນຍາທີ່ເຮົາໄດ້ໃຫ້ໄວ້ກັບພວກເຂົາ.
[17]ແລ້ວວັນນັ້ນ, ພິໂຣດຂອງເຮົາກໍ່ພຸ່ງຂຶ້ນທຳລາຍພວກເຂົາ, ແລະເຮົາຈະຖິ້ມພວກເຂົາ ເຮົາຈະເຊື່ອງຫນ້າຈາກພວກເຂົາ
ພວກເຂົາຈະຖືກເຜົາຜານ ພວກເຂົາຈະພົບແຕ່ຄວາມພິນາດແລະວິບັດຕ່າງໆ. ເພື່ອພວກເຂົາຈະເວົ້າໃນວັນນັ້ນວ່າ,
ພິນາດເຫລົ່ານີ້ບໍ່ໄດ້ມາເຫນືອພວກເຮົາກໍ່ເພາະພຣະເຈົ້າຂອງພວກເຮົາ, ໄດ້ຊົງຢູ່ທ່າມກາງພວກເຮົາບໍ່?"[18]ເຮົາຈະເຊື່ອງຫນ້າເຮົາ
ຈາກພວກເຂົາວັນນັ້ນຢ່າງແນ່ນອນເພາະຄວາມຊົ່ວຮ້າຍທັງຫມົດທີ່ພວກເຂົາໄດ້ເຮັດ, ເພາະເຂົາໄດ້ຫັນໄປຫາພະອື່ນ.
[19]ບັດນີ້ຈົ່ງຂຽນບົດເພງນີ້ເພື່ອຕົວຂອງພວກເຈົ້າເອງແລະສອນເພງນັ້ນໃຫ້ແກ່ປະຊາຊົນອິສະຣາເອນ, ຈົ່ງໃສ່ໄວ້ໃນປາກຂອງພວກເຂົາ,
ເພື່ອບົດເພງນີ້ຈະເປັນພະຍານໃນການຕໍ່ສູ້ກັບປະຊາຊົນ ອິສະຣາເອນ.
[20]ເພາະເມື່ອເຮົາຈະໄດ້ນຳພວກເຂົາເຂົ້າມາໃນດິນແດນທີ່ເຮົາໄດ້ສັນຍາວ່າຈະມອບໃຫ້ແກ່ບັນພະບຸຣຸດຂອງພວກເຂົາ,
ຄືດິນແດນທີ່ເຕັມດ້ວຍນ້ຳນົມແລະນ້ຳເຜີ້ງ, ແລະເມື່ອພວກເຂົາໄດ້ກິນແລະອີ່ມຫນຳແລະອ້ວນພີ, ແລ້ວພວກເຂົາຈະຫັນໄປຫາພະອື່ນໆ
ແລະພວກເຂົາຈະປະຕິບັດພະເຫລົ່ານັ້ນແລະພວກເຂົາຈະດູຫມິ່ນປະຫມາດເຮົາ ແລະ
ພວກເຂົາຈະດູຫມິ່ນເຮົາແລະພວກເຂົາຈະທຳລາຍພັນທະສັນຍາເຮົາ.
[21]ເມື່ອຄວາມຊົ່ວຮ້າຍແລະບັນຫາຫລວງຫລາຍມາເຫນືອປະຊາຊົນນີ້, ບົດເພງນີ້ຈະເປັນພະຍານຕໍ່ພວກເຂົາດັ່ງຄຳພະຍານ
(ເພາະມັນຈະບໍ່ຖືກລືມໄປຈາກປາກຂອງບັນດາເຊື້ອສາຍຂອງພວກເຂົາ). ເພາະເຮົາຮູ້ແຜນການຕ່າງໆ ທີ່ພວກເຂົາກຳລັງສ້າງໃນວັນນີ້,
ແມ່ນກ່ອນທີ່ເຮົາຈະໄດ້ນຳພວກເຂົາເຂົ້າໄປດິນແດນທີ່ເຮົາໄດ້ສັນຍາແກ່ພວກເຂົາກໍ່ຕາມ.
[22]ດັ່ງນັ້ນໂມເຊຈຶ່ງໄດ້ຂຽນບົດເພງໃນວັນດຽວກັນນັ້ນແລະໄດ້ສອນບົດເພງນັ້ນໃຫ້ກັບປະຊາຊົນອິສະຣາເອນ.
[23]ພຣະຢາເວໄດ້ປະທານບັນຍັດຢ່າງຫນຶ່ງແກ່ໂຢຊວຍລູກຊາຍຂອງນູນ, "ຈົ່ງເຂັ້ມແຂງແລະກ້າຫານເຖີດ;
ເພາະເຈົ້າຈະນຳຄົນເຂົ້າໄປດິນແດນທີ່ເຮົາໄດ້ສັນຍາແກ່ພວກເຂົາ, ແລະເຮົາຈະຢູ່ກັບເຈົ້າ".
[24]ສິ່ງນີ້ເກີດຂຶ້ນແລ້ວໂມເຊໄດ້ຂຽນຖ້ອຍຄຳຕ່າງໆ ຂອງກົດຫມາຍນີ້ລົງໃນຫນັງສືຈົນສຳເລັດ,
[25]ທີ່ເຂົາໄດ້ບັນຊາຄົນເລວີຜູ້ທີ່ຫາມຫີບພັນທະສັນຍາຂອງພຣະຢາເວພຣະເຈົ້າຂອງພວກທ່ານ, ແລະເຂົາໄດ້ເວົ້າວ່າ,
[26]"ຈົ່ງເອົາຫນັງສືແຫ່ງກົດຫມາຍນີ້ແລະໃສ່ໄປດ້ານໃນຂອງຫີບພັນທະສັນຍາຂອງພຣະຢາເວພຣະເຈົ້າຂອງພວກທ່ານ,
ດັ່ງນັ້ນເພື່ອເປັນຄຳພະຍານຕໍ່ສູ້ພວກທ່ານ.
[27]ເພາະຂ້ານ້ອຍຮູ້ເລື່ອງກະບົດຂອງພວກທ່ານແລະເລື່ອງຄວາມດື້ດຶງຂອງພວກທ່ານ; ຈົ່ງເບິ່ງສາ,
ໃນຂະນະທີ່ຂ້ານ້ອຍມີຊີວິດຢູ່ຮ່ວມກັນກັບພວກທ່ານໃນທຸກວັນນີ້, ພວກທ່ານຍັງໄດ້ກະບົດຕໍ່ພຣະຢາເວ;


generated on Tue Jun 17 19:01:42 2025

ແລ້ວມັນຈະຍິ່ງກວ່ານີ້ປານໃດເມື່ອຫລັງຈາກຂ້ານ້ອຍຕາຍໄປແລ້ວ?[28]ຈົ່ງເອີ້ນຊຸມນຸມຜູ້ອາວຸໂສທັງຫມົດຂອງເຜົ່າຕ່າງໆ ຂອງພວກທ່ານ,
ແລະພວກນາຍພົນທັງຫລາຍຂອງພວກທ່ານໃຫ້ແກ່ຂ້ານ້ອຍ,
ເພື່ອວ່າຂ້ານ້ອຍຈະເວົ້າຖ້ອຍຄຳເຫລົ່ານີ້ເຂົ້າໄປຫູຂອງພວກເຂົາແລະເອີ້ນທ້ອງຟ້າແລະແຜ່ນດິນໂລກມາເປັນພະຍານຕໍ່ສູ້ພວກເຂົາ.
[29]ເພາະຂ້ານ້ອຍຮູ້ວ່າຫລັງຈາກຂ້ານ້ອຍຕາຍໄປແລ້ວ ພວກທ່ານຈະເຮັດໃຫ້ຕົວເອງຊົ່ວຊ້າ;
ແລະຫັນອອກຈາກວິທີທີ່ຂ້ານນ້ອຍໄດ້ບັນຊາພວກທ່ານ ຄວາມພິນາດຈະເຫນືອພວກທ່ານໃນວັນເຫລົ່ານັ້ນທີ່ຕາມມາ.
ສິ່ງນີ້ຈະເກີດຂຶ້ນເພາະພວກທ່ານຈະເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ,
ທີ່ເປັນການເຮັດໃຫ້ພຣະອົງພິໂຣດໂດຍຜ່ານການງານແຫ່ງນ້ຳມືຂອງພວກທ່ານ".
[30]ໂມເຊອ່ານອອກສຽງຖ້ອຍຄຳຕ່າງໆ ຂອງບົດເພງນີ້ໃຫ້ກັບຊຸມນຸມຄົນທັງຫມົດຂອງອິດສະຣາເອນໄດ້ຍິນຈົນກະທັ່ງຈົບບົດເພງ.

 generated on Tue Jun 17 19:01:42 2025

32 [1]ຈົ່ງຟັງເຖີດ, ພວກເຈົ້າທ້ອງຟ້າທັງຫລາຍ, ແລະຂ້ານ້ອຍຈະເວົ້າ, ຂໍໃຫ້ແຜ່ນດິນຈົ່ງຟັງຖ້ອຍຄຳຕ່າງໆຈາກປາກຂອງຂ້ານ້ອຍ.
[2]ຂໍໃຫ້ຄຳສອນຂອງຂ້ານ້ອຍຢາດລົງຄືສາຍຝົນ, ຂໍໃຫ້ຄຳເວົ້າຂອງຂ້ານ້ອຍຍ້ອຍລົງມາຄືນ້ຳຄ້າງຄືກັບຝົນຊື່ນໃຈ,
ຍ້ອຍລົງມາເທິງຫຍ້າທີ່ອ່ອນໄຫວ, ແລະເປັນຄືຫົດນ້ຳພືດພັນທັງປວງ.

[3]ເພາະຂ້ານ້ອຍຈະປະກາດພຣະນາມຂອງພຣະຢາເວ, ແລະອ້າງເຖິງຄວາມຍິ່ງໃຫຍ່ຖວາຍແດ່ພຣະຢາເວພຣະເຈົ້າຂອງເຮົາ.[4]ພຣະສີຣິ,
ຄວາມຍິ່ງໃຫຍ່, ພາລະກິດຂອງພຣະອົງນັ້ນດີພ້ອມ; ເພາະວິຖີທາງທັງຫມົດຂອງພຣະອົງນັ້ນຍຸຕິທັມ, ພຣະອົງເປັນພຣະເຈົ້າສັດຊື່
ຊຶ່ງປະກາດຄວາມຊົ່ວຊ້າ. ພຣະອົງຊົງຍຸຕິທັມແລະຊື່ຕົງ.
[5]ພວກເຂົາໄດ້ເຮັດຢ່າງຊົ່ວເພື່ອຕໍ່ສູ້ກັບພຣະອົງ, ພວກເຂົາບໍ່ແມ່ນລູກທັງຫລາຍຂອງພຣະອົງນັ້ນເປັນຄວາມອັບປະຍົດຂອງພວກເຂົາ.
ພວກເຂົາເປັນຊົນຮຸ່ນທີ່ຫລົງຜິດແລະບໍ່ຊື່ສັດ.[6]ພວກທ່ານໂງ່ ແລະບໍ່ມີສະຕິ, ພວກທ່ານຕອບແທນພຣະຢາເວດ້ວຍວິທີນີ້ບໍ?
ພຣະອົງຜູ້ທີ່ໄດ້ຊົງສ້າງພວກທ່ານ, ບໍ່ໄດ້ຊົງເປັນພຣະບິດາຂອງພວກເຈົ້າບໍ? ພຣະອົງໄດ້ຊົງສ້າງແລະສະຖາປະນາພວກທ່ານ.
[7]ຈົ່ງລະນຶກເຖິງວັນທັງຫລາຍ,
ຈົ່ງຄິດເຖິງປີທັງຫລາຍທີ່ຜ່ານມາຫລາຍຊົ່ວອາຍຸຈົ່ງຖາມບິດາຂອງພວກທ່ານແລະເຂົາຈະສະແດງໃຫ້ພວກທ່ານເຫັນ,
ພວກຜູ້ໃຫຍ່ທັງຫລາຍແລະພວກເຂົາຈະບອກພວກທ່ານ.[8]ເມື່ອອົງສູງສຸດໄດ້ປະທານຊົນຊາດທັງຫລາຍໃຫ້ເປັນມໍຣະດົກພວກເຂົາ,
ພຣະອົງກະຈາຍມະນຸດທັງຫມົດແລະພຣະອົງໄດ້ຊົງຕັ້ງຂອບເຂດໃຫ້ກັບປະຊາຊົນເຫລົ່ານັ້ນ,
ດັ່ງທີ່ພຣະອົງໄດ້ກຳນົດຈຳນວນບັນດາພະຂອງພວກເຂົານັ້ນ.
[9]ເພາະສ່ວນຂອງພຣະຢາເວຄືປະຊາຊົນຂອງພຣະອົງ; ຢາໂຄບເປັນມໍຣະດົກທີ່ໄດ້ຮັບການແຕ່ງຕັ້ງຂອງພຣະຢາເວ.[10]ໃນຖິ່ນທຸລະກັນດານ
ທີ່ບໍ່ມີພືດຜົນແລະກວ້າງໃຫຍ່ ພຣະອົງໄດ້ຊົງປົກປ້ອງເຂົາແລະຊົງດູແລເຂົາ, ພຣະອົງໄດ້ຊົງຄຸ້ມກັນເຂົາເຫມືອນດັ່ງແກ້ວຕາຂອງພຣະອົງ.
[11]ເຫມືອນດັ່ງນົກອິນຊີໂຕຫນຶ່ງທີ່ປົກປ້ອງຮັງຂອງມັນແລະພືປີກອອກເພື່ອຮັກສາລູກຂອງມັນ,
ພຣະຢາເວກໍໄດ້ຊົງກາງປີກອອກແລະນຳທາງພວກເຂົາ.[12]ພຣະຢາເວໄດ້ຊົງແບກພວກເຂົາໄວ້ເທິງປີກຂອງພຣະອົງທັງໄດ້ຊົງນຳເຂົາພຽງຜູ້ດຽວ;
ບໍ່ແມ່ນພະຂອງຄົນຕ່າງຊາດທີ່ຢູ່ກັບເຂົາ.
[13]ພຣະອົງໄດ້ເຮັດໃຫ້ເຂົາຂີ່ຂຶ້ນໄປສະຖານທີ່ສູງຂອງດິນແດນນັ້ນ, ແລະພຣະອົງໄດ້ຊົງລ້ຽງດູເຂົາດ້ວຍຜົນຕ່າງໆ; ຈາກທົ່ງນາ
ພຣະອົງໄດ້ຊົງລ້ຽງດູເຂົາດ້ວຍນ້ຳເຜິ້ງຈາກສີລາ, ແລະນ້ຳມັນຈາກຜາຫີນຊັນ.
[14]ເຂົາໄດ້ກິນອາຫານແລະດື່ມນ້ຳນົມຈາກຝູງສັດ ພ້ອມກັບໄຂມັນຂອງແກະທັງຫລາຍ, ບັນດາແກະໂຕຜູ້ແຫ່ງບາຊານ, ແລະແບ້ທັງຫລາຍ,
ບັນດາແກະຜູ້ແຫ່ງບາຊານ, ແລະແພະທັງຫລາຍ, ພ້ອມກັບເຂົ້າສາລີທີ່ດີທີ່ສຸດ,
ແລະພວກທ່ານຈະໄດ້ດື່ມເຫລົ້າອະງຸ່ນຊັ້ນດີທີ່ນຳມາຈາກນ້ຳອະງຸ່ນ.
[15]ແຕ່ເຢຊູຣູນອ້ວນພີແລະຂັດຂືນ, ພວກທ່ານອ້ວນພີຂຶ້ນ ທ່ານອ້ວນຫລາຍເກີນໄປ, ແລະທ່ານໄດ້ກິນອາຫານອີ່ມ,
ແລະເຂົາໄດ້ປະຕິເສດສີລາແຫ່ງຄວາມພົ້ນຂອງເຂົາ.[16]ພວກເຂົາໄດ້ເຮັດໃຫ້ພຣະຢາເວຫຶງຫວງໂດຍບັນດາພະແປກຫນ້າຂອງພວກເຂົາ
ໂດຍສິ່ງທີ່ຫນ້າລັງກຽດຂອງເຂົາ; ພວກເຂົາໄດ້ເຮັດໃຫ້ພຣະອົງ ໂກດຮ້າຍ.
[17]ພວກເຂົາຖວາຍເຄື່ອງບູຊາຕໍ່ວິນຍານທັງຫລາຍ, ຊຶ່ງບໍ່ແມ່ນພຣະເຈົ້າ ບັນດາພະຕ່າງໆທີ່ພວກເຂົາບໍ່ຮູ້ຈັກ, ບັນດາພະຕ່າງໆທີ່ປະກົດບໍ່ດົນມານີ້,
ບັນດາພະຕ່າງໆ, ທີ່ບັນດາບັນພະບຸຣຸດພວກທ່ານບໍ່ໄດ້ຢຳເກງພຣະຢາເວ.[18]ພວກທ່ານຖິ້ມພຣະສີລາ ຜູ້ໄດ້ຊົງມາເປັນພຣະບິດາຂອງພວກທ່ານ,
ແລະພວກທ່ານໄດ້ຫລົງລືມພຣະເຈົ້າຜູ້ຊົງໃຫ້ກຳເນີດພວກທ່ານ.
[19]ພຣະຢາເວໄດ້ເຫັນສິ່ງນີ້,
ແລະພຣະອົງໄດ້ຊົງປະຕິເສດພວກເຂົາເພາະບັນດາລູກຊາຍຂອງພວກເຂົາແລະບັນດາລູກຜູ້ຍິງຂອງເຂົາໄດ້ເຮັດໃຫ້ໃຈຮ້າຍ.
[20]ເຮົາຈະຫລົບຫນ້າຂອງເຮົາຈາກພວກເຂົາ, "ພຣະອົງໄດ້ຕັດສັ່ງ" ແລະເຮົາຈະເບິ່ງວ່າຈຸດຈົບຂອງພວກເຂົາເປັນແນວໃດ;
ເພາະເຂົາເປັນຊົນຮຸ່ນທີ່ເອົາແຕ່ໃຈ ພວກລູກທີ່ບໍ່ຊື່ສັດ.
[21]ພວກເຂົາໄດ້ເຮັດໃຫ້ເຮົາອິດສາໂດຍສິ່ງທີ່ບໍ່ແມ່ນພຣະເຈົ້າແລະເຮັດໃຫ້ເຮົາຢາກຮ້າຍໂດຍສິ່ງບໍ່ມີຄ່າຂອງພວກເຂົາ,
ເຮົາຈະເຮັດໃຫ້ພວກເຂົາອິດສາຄົນເຫລົ່ານັ້ນທີ່ບໍ່ໄດ້ເປັນຊົນຊາດ; ຄືຊົນຊາດທີ່ໂງ່ ເຮົາຈະເຮັດໃຫ້ເຂົາຢາກຮ້າຍ.
[22]ເພາະໄຟໄດ້ພຸ່ງຂຶ້ນດ້ວຍຄວາມໂກດຮ້າຍຂອງເຮົາແລະກຳລັງເຜົາຜານໄປຮອດສ່ວນທີ່ເລິກຂອງແດນຄົນຕາຍ;
ໄຟກຳລັງເຜົາຜານແຜ່ນດິນໂລກ; ແລະ ການເກັບກ່ຽວຂອງມັນ ຮາກຖານຂອງພູເຂົາຕ່າງໆ ກຳລັງລຸກດ້ວຍໄຟ.
[23]ເຮົາຈະສຸມໄພພິບັດຕ່າງໆເທິງພວກເຂົາ, ເຮົາຈະຍິງລູກທັງຫມົດໃສ່ພວກເຂົາ;
[24]ພວກເຂົາຈະເຮັດໃຫ້ສູນເປົ່າໂດຍຄວາມຫິວແລະການເຜົາຜານຢ່າງຮ້ອນແຮງ ແລະການທຳລາຍຢ່າງຂົມຂື່ນ;
ເຮົາຈະສົ່ງສັດປ່າທີ່ມີແຂ້ວເລັບ, ມາຍັງພວກທ່ານດ້ວຍສິ່ງຕ່າງໆ ທີ່ມີພິດທີ່ຄານມາ.
[25]ທີ່ຫລົງເຫລືອຈາກດາບຈະສິ້ນຊີບ, ແລະໃນຫ້ອງນອນຕ່າງໆ ກໍຈະມີຄວາມຢ້ານ. ມັນຈະທຳລາຍຄົນຫນຸ່ມແລະຍິງສາວບໍຣິສຸດ, ເດັກນ້ອຍ,
ແລະຊາຍທີ່ມີຜົມຫງອກ.[26]ເຮົາໄດ້ເວົ້າວ່າເຮົາຈະໃຫ້ພວກເຂົາກະຈັດກະຈາຍໄປ,
ທີ່ເຮົາຈະເຮັດໃຫ້ອານຸສອນຂອງພວກເຂົາຫມົດໄປຈາກທ່າມກາງມະນຸດ.
[27]ແຕ່ເຮົາກໍຢ້ານການຍົວະຂອງສັດຕຣູ ແລະບັນດາຂອງສັດຕຣູຂອງພວກເຂົາຈະຕັດສິນຢ່າງຜິດພາດ, ແລະພວກເຂົາຈະກ່າວວ່າ,
"ມືຂອງພວກເຂົາໄດ້ຮັບການຍົກຍ້ອງ,"ເຮົາຈະເຮັດສິ່ງນີ້ທັງຫມົດ.
[28]ເພາະອິສະຣາເອນເປັນຊົນຊາດຫນຶ່ງທີ່ມີສະຕິປັນຍາ, ແລະມີການເຂົ້າໃຈພວກເຂົາ.[29]ໂອ, ພວກທີ່ເຂົາມີປັນຍາ ແລະມີຄວາມເຂົ້າໃຈສິ່ງນີ້,
ທີ່ພວກເຂົາຈະໄດ້ພິຈາລະນາເຖິງຈຸດຈົບຂອງເຂົາທີ່ຈະມາເຖິງ.
[30]ຄົນຫນຶ່ງຈະສາມາດຂັບໄລ່ພັນຄົນໄດ້ຢ່າງໃດ, ແລະສອງຄົນຈະຖືກຂັບໄລ່ຫນຶ່ງຫມື່ນຄົນໄດ້ແນວໃດ,
ເວັ້ນເຕ່ພຣະສີລາຂອງເຂົາໄດ້ຂະຫຍາຍພວກເຂົາເສຍ, ແລະພຣະຢາເວເຮັດໃຫ້ເຂົາພ່າຍແພ້?
[31]ເພາະກ້ອນຫີນຂອງພວກສັດຕຣູທັງຫລາຍຂອງພວກເຂົານັ້ນຄືກັບພຣະສີລາຂອງພວກເຂົາ, ທີ່ແມ່ນແຕ່ພວກສັດຕຣູຂອງພວກເຮົາ ກໍຍອມແພ້.

32ເພາະເຄືອອະງຸ່ນຂອງພວກເຂົາທີ່ມາຈາກເຄືອອະງຸ່ນໂສໂດມ, ແລະຈາກທົ່ງນາຂອງໂກໂມຣາ; ຜົນອະງຸ່ນທັງຫລາຍເປັນຜົນອະງຸ່ນພິເສດ;
ພວງຂອງພວກມັນມີຣົດຂົມ.
33ເຫລົ້າອະງຸ່ນຂອງເຂົາຄືພິດຂອງງູ ແລະພິດຂອງງູທີ່ເປັນພິດທີ່ເຮັດໃຫ້ທໍຣະມານຢ່າງມາກມາຍ. 34ແຜນການນີ້ ເຮົາໄດ້ເກັບໄວ້ເປັນຄວາມລັບ,
ປິດໄວ້ທ່າມກາງສົມບັດຂອງເຮົາບໍ?.
35ການແກ້ແຄ້ນເປັນຂອງເຮົາທີ່ຈະມອບຄືນແລະຕອບແທນ, ໃນເວລານັ້ນເມື່ອຕີນຂອງລາວມື່ນ,
ເພາະວັນແຫ່ງໄພພິບັດສຳລັບພວກເຂົາເຂົ້າມາໃກ້ແລ້ວ, ແລະສິ່ງຕ່າງໆ ທີ່ຕ້ອງມາເຖິງພວກເຂົາກໍເກີດຂຶ້ນຢ່າງໄວ".
36ເພາະພຣະຢາເວຈະປະທານຄວາມຍຸຕິທັມແກ່ປະຊາຊົນຂອງພຣະອົງແລະ ພຣະອົງຈະຊົງອີຕົນບັນດາຜູ້ຮັບໃຊ້ຂອງພຣະອົງ
ພຣະອົງຈະຊົງເບິ່ງເຫັນອຳນາດຂອງພວກເຂົາສິ້ນໄປ ແລະບໍ່ມີໃຜຈັກຄົນຫລົງເຫລືອຢູ່ ບໍ່ວ່າທາດທັງຫລາຍຫລືຄົນທີ່ເປັນອິສະຫລະ.
37ແລ້ວພຣະອົງຈະກ່າວວ່າ, "ພະຕ່າງໆ, ຂອງພວກເຂົາຢູ່ໃສ ກ້ອນຫີນທີ່ພວກເຂົາເຂົ້າລີ້ໄພຢູ່ໃສ?- 38ພະຕ່າງໆ
ທີ່ກິນໄຂມັນທີ່ເປັນເຄື່ອງບູຊາຂອງພວກເຂົາແລະດື່ມເຫລົ້າອະງຸ່ນທີ່ເປັນເຄື່ອງບູຊາພວກເຂົາຢູ່ທີ່ໃດບໍ?
ຈົ່ງໃຫ້ພະເຫລົ່ານັ້ນລຸກຂຶ້ນແລະຊ່ວຍພວກທ່ານເຖີດ; ຈົ່ງໃຫ້ພະເຫລົ່ານັ້ນປົກປ້ອງພວກທ່ານເຖີດ.
39ເບິ່ງສາເຮົາຄືຜູ້ນັ້ນ, ເຮົາຄືພຣະເຈົ້າ, ແລະບໍ່ມີພະອື່ນໃດນອກເຫນືອຈາກເຮົາ, ເຮົາທຳລາຍໃຫ້ຕາຍແລະເຮົາໃຫ້ຊີວິດ,
ເຮົາໃຫ້ບາດເຈັບແລະເຮົາຮັກສາ, ແລະບໍ່ມີຜູ້ໃດຊ່ວຍໃຫ້ເຈົ້າລອດພົ້ນຈາກຣິດອຳນາດຂອງເຮົາໄດ້. 40ເພາະເຮົາຍົກມືຂຶ້ນຫ້ອງຟ້າແລະກ່າວວ່າ,
"ດັ່ງທີ່ເຮົາມີຊີວິດຢູ່ນິຣັນເຮົາຈະເຮັດ.
41ເມື່ອເຮົາລັບດາບອັນແວວວາວຂອງເຮົາໃຫ້ຄົມລິບ ເມື່ອມືຂອງເຮົາເລີ່ມຕົ້ນນຳຄວາມຍຸຕິທັມມາ
ເຮົາຈະຕອບແທນດ້ວຍການແກ້ແຄ້ນສັດຕຣູຂອງເຮົາ ແລະເຮົາຈະສະຫນອງຄືນໃຫ້ແກ່ຄົນເຫລົ່ານັ້ນທີ່ລັງກຽດເຮົາ.
42ເຮົາຈະເຮັດໃຫ້ລູກຂອງເຮົາເມົາໂລຫິດ, ແລະດາບຂອງເຮົາຈະກິນເນື້ອ
ດ້ວຍໂລຫິດຂອງຜູ້ຖືກຂ້າແລະຜູ້ເປັນຊະເລີຍທັງຫລາຍແລະຈາກຫົວຂອງຜູ້ນຳຂອງພວກສັດຕຣູນັ້ນ".
43ຈົ່ງຊື່ນຊົມຍິນດີ, ພວກເຈົ້າຊົນຊາດທັງຫລາຍ, ພ້ອມກັບປະຊາຊົນຂອງພຣະເຈົ້າ,
ເພາະພຣະອົງຈະແກ້ແຄ້ນໃຫ້ກັບໂລຫິດຂອງບັນດາຜູ້ຮັບໃຊ້ພຣະອົງ; ແລະພຣະອົງຈະລົບລ້າງບາບເພື່ອດິນແດນຂອງພຣະອົງ,
ເພື່ອປະຊາຊົນຂອງພຣະອົງ.
44ໂມເຊໄດ້ມາແລະກ່າວເນື້ອເພງທັງຫມົດໃຫ້ປະຊາຊົນໄດ້ຟັງ, ເຂົາກັບໂຢຊວຍລູກຊາຍຂອງນູນ.
45ເມື່ອໂມເຊທ່ອງຖ້ອຍຄຳທັງຫມົດນີ້ໃຫ້ກັບຄົນອິສະຣາເອນທັງປວງຈົນຈົບແລ້ວ.
46ເຂົາເວົ້າກັບປະຊາຊົນວ່າ, "ຈົ່ງໃຫ້ໃຈຂອງທ່ານຈົດຈໍ່ກັບຖ້ອຍຄຳທັງຫມົດທີ່ຂ້ານ້ອຍໄດ້ເປັນພະຍານໃຫ້ກັບພວກທ່ານໃນວັນນີ້,
ເພື່ອພວກທ່ານຈະສັ່ງບັນດາລູກຫລານທັງຫລາຍຂອງທ່ານ, ໃຫ້ຖືຮັກສາຖ້ອຍຄຳທັງຫມົດຂອງກົດຫມາຍນີ້.
47ເພາະໃນສິ່ງນີ້ບໍ່ມີສິ່ງໃດບໍ່ສຳຄັນສຳລັບພວກທ່ານ, ເພາະມັນຄືຊີວິດຂອງພວກທ່ານ, ແລະໂດຍທາງສິ່ງເຫລົ່ານີ້
ພວກທ່ານເຮັດໃຫ້ວັນຂອງພວກທ່ານຍືນຍາວໃນດິນແດນທີ່ພວກທ່ານກຳລັງຂ້າມແມ່ນ້ຳຈໍແດນໄປຍຶດຄອງນັ້ນ.
48ພຣະຢາເວໄດ້ກ່າວກັບໂມເຊໃນວັນດຽວກັນນັ້ນວ່າ, 49ຈົ່ງຂຶ້ນໄປເທິງພູເຂົາອາບາຣິມ, ຂຶ້ນໄປຈົນເຖິງພູເຂົາເນໂບ, ຊຶ່ງຢູ່ດິນແດນໂມອາບ,
ຝັ່ງກົງກັນຂ້າມເຢຣິໂກ. ເຈົ້າຈະເບິ່ງດິນແດນການາອານ, ທີ່ເຮົາກຳລັງມອບໃຫ້ປະຊາຊົນອິສະຣາເອນເປັນກຳມະສິດຂອງເຂົາ.
50ເຈົ້າຈະຕາຍເທິງພູເຂົານັ້ນທີ່ເຈົ້າຂຶ້ນໄປ, ແລະເຈົ້າຈະຖືກຮວບຮວມໄປຢູ່ກັບປະຊາຊົນຂອງເຈົ້າ, ຄືກັບອາໂຣນ,
ພີ່ນ້ອງຂອງອິສະຣາເອນຂອງເຈົ້າຈະຕາຍເທິງພູເຂົາແລະຖືກລວບລວມໄປຢູ່ກັບປະຊາຊົນຂອງເຂົາ.
51ສິ່ງນີ້ຈະເກີດຂຶ້ນເພາະເຈົ້າບໍ່ຊື່ສັດຕໍ່ເຮົາໃນທ່າມກາງປະຊາຊົນຂອງອິສະຣາເອນທີ່ນ້ຳແຫ່ງເມຣິບາຄາໃນຄາເດັດບາເນຍ,
ໃນຖິ່ນທຸລະກັນດານແຫ່ງ ຊິນ; ເພາະເຈົ້າໄດ້ປະຕິບັດຕໍ່ເຮົາດ້ວຍການໃຫ້ກຽດ ແລະນັບຖືທ່າມກາງອິສະຣາເອນ.
52ເພາະເຈົ້າຈະເບິ່ງເຫັນດິນແດນຕໍ່ຫນ້າເຈົ້າ, ແຕ່ເຈົ້າຈະເຂົ້າໄປທີ່ນັ້ນ, ຄືເຂົ້າໄປໃນດິນແດນທີ່ເຮົາກຳລັງມອບໃຫ້ກັບປະຊາຊົນອິສະຣາເອນ.

33 1ນີ້ຄືຄຳອວຍພອນທີ່ໂມເຊ ຜູ້ຮັບໃຊ້ຂອງພຣະເຈົ້າໄດ້ອວຍພອນປະຊາຊົນອິສະຣາເອນກ່ອນການຕາຍຂອງເຂົາ.2ເຂົາໄດ້ກ່າວວ່າ;
ພຣະຢາເວໄດ້ສະເດັດມາຈາກຊີນາຍແລະໄດ້ຊົງລຸກຂຶ້ນຈາກ ເອໂດມ ເຫນືອພວກເຂົາ. ພຣະອົງໄດ້ສາຍແສງຈາກພູເຂົາປາຣານ, ແລະ
ພຣະອົງໄດ້ມາພ້ອມກັບທູດສະຫວັນນັບຫມື່ນໆ, ໃນພຣະຫັດຂວາຂອງພຣະອົງຄືສາຍຟ້າແລບ.

3ແທ້ຈິງແລ້ວພຣະອົງຊົງຮັກປະຊາຊົນທັງຫລາຍ; ບັນດາໄພ່ພົນຂອງພຣະອົງແລະຢູ່ໃນພຣະຫັດຂອງພຣະອົງ,
ແລະພວກເຂົາໄດ້ກົ້ມກາບທີ່ພຣະບາດຂອງພຣະອົງ; ພວກເຂົາໄດ້ຖ້ອຍຄຳທັງຫລາຍຂອງພຣະອົງ.
4ໂມເຊໄດ້ບັນຊາກົດຫມາຍຢ່າງຫນຶ່ງແກ່ພວກເຂົາ, ມໍຣະດົກຢ່າງຫນຶ່ງສຳລັບຊຸມນຸມຊົນຂອງຢາໂຄບ.
5ແລ້ວມີກະສັດອົງຫນຶ່ງໃນເຢຊູຣູນ, ເມື່ອບັນດາຜູ້ນຳຂອງປະຊາຊົນໄດ້ມາຮ່ວມກັນ, ຊົນເຜົ່າທຸກເຜົ່າຂອງອິສະຣາເອນໄດ້ມາຢູ່ຮ່ວມກັນ.
6ຈົ່ງໃຫ້ຣູເບັນມີຊີວິດຢູ່ແລະບໍ່ຕາຍ, ແຕ່ຂໍໃຫ້ພວກຜູ້ຊາຍຂອງເຂົາມີເລັກນ້ອຍ.
7ນີ້ແມ່ນພຣະພອນສຳລັບຢູດາ, ໂມເຊໄດ້ກ່າວວ່າ, ຂ້າແດ່ພຣະຢາເວ, ຂໍຊົງຟັງເຖີດ, ຂໍຊົງຟັງສຽງຂອງຢູດາ,
ແລະນຳເຂົາມາຍັງປະຊາຊົນຂອງເຂົາອີກຄັ້ງ, ຂໍຊົງຕໍ່ສູ້ພວກເຂົາ, ຂໍຊົງເປັນຄວາມຊ່ວຍເຫລືອເພື່ອຕໍ່ສູ້ກັບພວກສັດຕຣູເຂົາ.
8ສຳລັບຄົນເລວີ, ໂມເຊໄດ້ກ່າວວ່າ: ໂດຍອູລິມແລະທຸມມີມ ຂອງພຣະອົງເປັນຜູ້ທີ່ຈົງຮັກພັກດີຂອງພຣະອົງ, ທີ່ພຣະອົງໄດ້ທົດສອບທີ່ມັດສາ,
ຜູ້ທີ່ພຣະອົງໄດ້ຊົງຕໍ່ສູ້ທີ່ເມຣິບາ.
9ຜູ້ທີ່ເວົ້າກັບພໍ່ ແລະ ແມ່ ຂອງເຂົາວ່າ, "ຂ້ານ້ອຍບໍ່ໄດ້ເຫັນພວກເຂົາ," ເຂົາບໍ່ຮູ້ຈັກພີ່ນ້ອງຂອງເຂົາ
ຫລືບໍ່ໄດ້ຮັບຜິດຊອບຕໍ່ບັນດາລູກຫລານຂອງເຂົາເອງ. ເພາະເຂົາໄດ້ປົກປ້ອງຖ້ອຍຄຳຂອງພຣະອົງ,
ແລະໄດ້ຖືຮັກສາພັນທະສັນຍາຂອງພຣະອົງ.
10ເຂົາສອນບັນຍັດພຣະອົງແກ່ຢາໂຄບ ແລະສອນກົດຫມາຍຂອງພຣະອົງແກ່ອິສະຣາເອນ.
ເຂົາຈະຖວາຍເຄື່ອງຫອມຕໍ່ພຣະພັກພຣະຢາເວແລະຖວາຍເຄື່ອງເຜົາບູຊາຂອງພຣະອົງ.
11ຂ້າແດ່ພຣະຢາເວ, ຂໍຊົງອວຍພອນບັນດາຊັບສິນຂອງເຂົາ, ແລະຍອມຮັບການງານຈາກມືຂອງເຂົາຂໍຊົງຂັບໄລ່ສິ່ງໂຕທີ່ລຸກຂຶ້ນຕໍ່ສູ້ພວກເຂົາ,
ແລະຄົນເຫລົ່ານັ້ນກຽດຊັງເຂົາ, ເພື່ອພວກເຂົາຈະບໍ່ໄດ້ລຸກຂຶ້ນຕໍ່ສູ້ອີກ.
12ສຳລັບເບນຢາມິນ, ໂມເຊໄດ້ກ່າວວ່າ: ຜູ້ທີ່ເປັນພຣະຢາເວຊົງຮັກແລະຢູ່ຄຽງຂ້າງເຂົາຢ່າງຫມັ້ນຄົງ; ເພາະພຣະຢາເວຊົງປົກປ້ອງເຂົາ
ຕະຫລອດເວລາອັນຍາວນານ, ແລະມີຊີວິດຢູ່ລະຫວ່າງອ້ອມພຣະກາຍຂອງພຣະຢາເວ.
13ສຳລັບໂຢເຊບ, ໂມເຊໄດ້ກ່າວວ່າ: ຂໍໃຫ້ດິນແດນຂອງເຂົາໄດ້ຮັບພຣະພອນຈາກພຣະຢາເວດ້ວຍສິ່ງມີຄ່າຕ່າງໆ ຈາກທ້ອງຟ້າ,
ດ້ວຍຢົດນ້ຳຄ້າງ, ແລະດ້ວຍສິ່ງທີ່ເລິກລຸ່ມແມ່ນ້ຳ.
14ຂໍໃຫ້ດິນແດນຂອງເຂົາໄດ້ຮັບການອວຍພອນດ້ວຍສິ່ງມີຄ່າຕ່າງໆ ຊຶ່ງເປັນການເກັບກ່ຽວຈາກດວງຕາເວັນ, ດ້ວຍສິ່ງມີຄ່າຕ່າງໆ
ອັນເປັນຜົນຈາກເດືອນທັງຫລາຍ,15ດ້ວຍສິ່ງທີ່ດີທີ່ສຸດຈາກບັນດາພູເຂົາບູຮານ, ແລະດ້ວຍສິ່ງມີຄ່າຕ່າງໆ ຈາກບັນດາເນີນເຂົາຊົ່ວນິຣັນດອນ.
16ຂໍໃຫ້ດິນແດນຂອງເຂົາໄດ້ຮັບສິ່ງມີຄ່າຕ່າງໆ ແຫ່ງແຜ່ນດິນແລະຄວາມອຸດົມສົມບູນຂອງມັນ,
ແລະດ້ວຍນ້ຳພຣະທັຍປະເສີດຂອງພຣະອົງຜູ້ຢູ່ໃນພຸ່ມໄມ້ນັ້ນ. ຂໍໃຫ້ພຣະພອນມາຍັງຫົວຂອງໂຢເຊບ,
ແລະຫົວຜູ້ປົກຄອງເຫນືອພວກພີ່ນ້ອງຂອງເຂົາ.
17ສັດຫົວປີຂອງງົວ, ຄືສັກສີຂອງເຂົາ, ແລະເຂົາຂອງເຂົາເປັນເຂົາຂອງງົວປ່າ.
ດ້ວຍສິ່ງເຫລົ່ານີ້ເຂົາຈະຊຸກພວກປະຊາຊົນທັງຫລາຍອອກໄປຈົນສຸດແຜ່ນດິນໂລກ. ພວກເຂົາທັງຫມົດເຫລົ່ານີ້ຄືຄົນ ເອຟຣາອິມ; ນັບຫມື່ນໆ
ຄົນທັງຫມົດ ເຫລົ່ານີ້ຄືຄົນ ມານັດເຊ ນັບພັນໆ ຄົນ.
18ສຳລັບເຊບູໂລນ, ໂມເຊໄດ້ກ່າວວ່າ: ເຊບູໂລນ, ຈົ່ງຊື່ນຊົມຍິນດີເຖີດ, ໃນການອອກໄປ, ແລະພວກທ່ານ, ອິດຊາຄາ, ຈົ່ງຢູ່ໃນເຕັນ.
19ພວກເຂົາຈະເອີ້ນປະຊາຊົນທັງຫລາຍໄປທີ່ພູເຂົາຕ່າງໆ, ທີ່ນັ້ນເຂົາຈະຖວາຍເຄື່ອງບູຊາແຫ່ງຄວາມຊອບທັມ.
ເພາະພວກເຂົາຈະດູດກິນຄວາມອຸດົມສົມບູນໃນທ້ອງທະເລທັງຫລາຍ, ແລະຈາກເມັດຊາຍເທິງຫາດຊາຍ.
20ສຳລັບກາດ, ໂມເຊໄດ້ກ່າວວ່າ: ການອວຍພອນຊົງເປັນຂອງເຂົາຄືຜູ້ທີ່ເຮັດໃຫ້ກາດ ກວ້າງໃຫຍ່ຫລາຍຂຶ້ນ.
ເຂົາຈະມີຊີວິດເຫມືອນກັບນາງສິງ, ແລະເຂົາຈະສີກແຂນຫລືຫົວ.
21ເຂົາໄດ້ຈັດຕຽມສິ່ງທີ່ດີທີ່ສຸດສຳລັບຕົວເອງ, ເພາະມີສ່ວນດິນແດນທີ່ເປັນຂອງຜູ້ນຳທີ່ຖືກສະຫງວນໄວ້.
ເຂົາມາພ້ອມກັບບັນດາຫົວຫນ້າຂອງປະຊາຊົນ ເຂົາເຮັດໃຫ້ຄວາມຍຸຕິທັມຂອງພຣະຢາແລະບັນດາຫົວຫນ້າຂອງປະຊາຊົນ.
ແລະເຮັດໃຫ້ຄວາມຍຸຕິທັມຂອງພຣະຢາເວ ແລະບັນດາຂໍ້ບັງຄັບຂອງພຣະອົງແກ່ອິສະຣາເອນສຳເລັດ.
22ສຳລັບດານ, ໂມເຊໄດ້ກ່າວວ່າ: ດານເປັນສິງຫນຸ່ມໂຕຫນຶ່ງທີ່ໂດດອອກມາຈາກບາຊານ.
23ສຳລັບນັບທາລີ, ໂມເຊໄດ້ກ່າວວ່າ: ນັບທາລີ ຈົ່ງອີ່ມໃຈຢູ່ກັບຄວາມດີໃຈ, ແລະເຕັມໄປດ້ວຍພຣະພອນຂອງພຣະຢາເວ,
ຈົ່ງຢຶດຄອງດິນແດນທາງຕາເວັນຕົກແລະທາງໃຕ້.
24ໂມໂຊໄດ້ກ່າວວ່າ: ການອວຍພອນຊົງເປັນຂອງ ອາເຊ ຫລາຍຫຍິ່ງກວ່າບັນດາລູກຊາຍອື່ນໆ;
ຈົ່ງໃຫ້ເຂົາເປັນທີ່ຍອມຮັບຕໍ່ບັນດາພີ່ນ້ອງຂອງເຂົາ, ແລະຈົ່ງຍອມໃຫ້ເຂົາຈຸ່ມຕີນຂອງເຂົາໃນນ້ຳມັນຫມາກກອກ.25ຂໍໃຫ້ ດານ
ແລະປະຕູເມືອງຂອງພວກທ່ານເປັນດານແລະທອງສຳຣິດ; ພວກທ່ານຈະຢູ່ໃນຄວາມຫມັ້ນຄົງປອດໄພດົນນານ, ເທົ່າທີ່ພວກທ່ານມີຊີວິດຢູ່.
26ບໍ່ມີຜູ້ໃດເປັນເຫມືອນພຣະເຈົ້າ, ແຫ່ງເຢຊູຣູນຜູ້ສັດຊື່ ຄືຜູ້ຊົງພາຫະນະຜ່ານທ້ອງຟ້າທັງຫລາຍເພື່ອຊ່ວຍພວກທ່ານ,
ແລະໃນສະຫງ່າຣາສີຂອງພຣະອົງເທິງເມກທັງຫລາຍ.
27ພຣະເຈົ້າຜູ້ຊົງເປັນນິຣັນດອນ, ຄືທີ່ລີ້ໄພແລະພາຍໃຕ້ຄືພຣະກາຍທີ່ນິຣັນດອນ. ພຣະອົງຊົງຂັບໄລ່ສັດຕຣູອອກໄປຕໍ່ຫນ້າຕໍ່ຕາພວກທ່ານ,
ແລະພຣະອົງໄດ້ກ່າວວ່າ, "ຈົ່ງທຳລາຍເສຍ!".
28ອິສະຣາເອນໄດ້ພັກອາໄສຢູ່ທີ່ປອດໄພ. ນ້ຳພຸຂອງຢາໂຄບນັ້ນຫມັ້ນຄົງຢູ່ ໃນດິນແດນແຫ່ງພືດຜົນແລະເຫລົ້າອະງຸ່ນໃຫມ່; ຈົ່ງໃຫ້,
ທ້ອງຟ້າທັງຫລາຍຂອງພຣະອົງຢາດນ້ຳຄ້າງເຫນືອເຂົາເຖີດ.

29ພຣະທັງຫລາຍຂອງພຣະອົງນັ້ນຫລາຍ, ອິສະຣາເອນ, ໃຜເປັນເຫມືອນພວກທ່ານ, ຄືປະຊາຊົນທີ່ໄດ້ຮັບການຊ່ວຍໃຫ້ພົ້ນໂດຍພຣະຢາເວ,
ຜູ້ຊຶ່ງເປັນໂລ່ແຫ່ງ ຄວາມຊ່ວຍເຫລືອຂອງພວກທ່ານ, ແລະຊຶ່ງເປັນດາບແຫ່ງສັກສີຂອງພວກທ່ານບໍ?
ບັນດາສັດຕູພວກທ່ານຈະມາເພື່ອເຮັດໃຫ້ພວກທ່ານສັ່ນສະເທືອນ; ແຕ່ພວກທ່ານຈະໃຫ້ບັນດາທີ່ສູງຂອງພວກເຂົາສັ່ນສະເທືອນແລະລົ້ມລົງ.


generated on Tue Jun 17 19:01:42 2025

34 [1]ໂມເຊຈຶ່ງຂຶ້ນຈາກທີ່ຮາບພຽງ ໂມອາບຈົນເຖິງພູເຂົາເນໂບ, ເຖິງຍອດເຂົາປີສະກາ, ຊຶ່ງຢູ່ຝັ່ງຕົງຂວ້າມກັບເມືອງເຢຣີໂກ,
ທີ່ນັ້ນພຣະຢາເວໄດ້ຊົງສຳແດງໃຫ້ເຂົາເຫັນດິນແດນທັງຫມົດຂອງກີເລອາດໄປໄກຈົນເຖິງດານ,[2]ແລະນັບທາລີທັງຫມົດ,
ແລະດິນແດນຂອງເອຟຣາອິມກັບມານາເຊ, ແລະດິນແດນທັງຫມົດຂອງຢູດາ, ໄປຈົນເຖິງທະເລທາງຝັ່ງຕາເວັນຕົກ.[3]ແລະເນເກບ,
ແລະທີ່ພູພຽງ ແຫ່ງເຢຣີໂກ, ເມືອງແຫ່ງກົກຕານ, ໄປໄກຈົນເຖິງໂຊອາ.

[4]ພຣະຢາເວກ່າວກັບເຂົາວ່າ, "ນີ້ຄືດິນແດນທີ່ເຮົາໄດ້ສັນຍາໄວ້ແກ່ອັບຣາຮາມ, ແກ່ອີຊາກ, ແລະແກ່ຢາໂຄບ, ໂດຍກ່າວວ່າ,
"ເຮົາຈະມອບດິນແດນນັ້ນແກ່ເຊື້ອສາຍຂອງພວກເຈົ້າ," ເຮົາໄດ້ອະນຸຍາດໃຫ້ເຈົ້າເບິ່ງເຫັນດິນແດນນັ້ນກັບຕາຂອງເຈົ້າ,
ແຕ່ເຈົ້າຈະໄດ້ຂວ້າມໄປທີ່ນັ້ນ.[5]ດັ່ງນັ້ນໂມເຊຜູ້ຮັບໃຊ້ຂອງພຣະຢາເວ, ຈຶ່ງໄດ້ເສຍຊີວິດໃນດິນແດນໂມອາບ,
ດັ່ງຖ້ອຍຄຳຂອງພຣະຢາເວໄດ້ຊົງສັນຍາໄວ້.[6]ພຣະຢາເວຊົງຝັ່ງເຂົາໄວ້ດິນແດນໂມອາບທາງຝັ່ງກົງກັນຂວ້າມກັບ ເບັດເປອໍ,
ແຕ່ບໍ່ຮູ້ວ່າຝັງສົບຢູ່ບ່ອນໃດຈວບຈົນວັນນີ້.
[7]ໂມເຊມີອາຍຸຫນຶ່ງຮ້ອຍຊາວປີເມື່ອເຂົາເສຍຊີວິດ; ຕາຂອງເຂົາບໍ່ຟາງ, ແລະແຮງກໍບໍ່ລົດນ້ອຍລົງ.
[8]ປະຊາຊົນອິສະຣາເອນໄດ້ຄ້ຳຄວນເພື່ອໂມເຊໃນທົ່ງພຽງໂມອາບເປັນເວລາສາມສິບວັນ, ແລະແລ້ວວັນຕ່າງໆ
ແຫ່ງການຄ້ຳຄວນໂມເຊກໍຈົບສິ້ນ.
[9]ໂຢຊວຍລູກຊາຍຂອງນູນກໍໄດ້ເຕັມໄປດ້ວຍພຣະວິນຍານແຫ່ງສະຕິປັນຍາເພາະໂມເຊໄດ້ວາງມືໃຫ້ເພິ່ນທຳຫນ້າທີ່ແທນ.
ປະຊາຊົນອິສະຣາເອນໄດ້ເຊື່ອຟັງໂຢຊວຍ. ແລະໄດ້ເຮັດສິ່ງທີ່ພຣະຢາເວໄດ້ຊົງບັນຊາແກ່ໂມເຊ.
[10]ນັບຈາກວັນນັ້ນເປັນຕົ້ນມາບໍ່ມີຜູ້ເຜີຍພຣະວະຈະນະໃດທີ່ຄືໂມເຊ, ຄືຜູ້ທີ່ພຣະຢາເວຊົງຮູ້ຈັກຫນ້າຕໍ່ຫນ້າ.
[11]ບໍ່ມີຜູ້ເຜີຍພຣະວະຈະນະໃດເປັນຄືເຂົາໃນເລື່ອງຫມາຍສຳຄັນແລະການອັດສະທີ່ພຣະຢາເວໄດ້ຊົງສົ່ງເຂົາເຂົ້າໄປໃນດິນແດນອີຢິບ,
ຄືຕໍ່ຟາໂຣ ແລະຕໍ່ບັນດາທາດຂອງເຂົາ, ແລະຕໍ່ດິນແດນທັງຫມົດຂອງເຂົາ.
[12]ບໍ່ເຄີຍມີຜູ້ເຜີຍພຣະວະຈະນະຄົນໃດທີ່ເປັນເຫມືອນຄວາມຍິ່ງໃຫຍ່ທັງຫມົດ,
ຄືການເຮັດອັນຫນ້າຢຳເກງທີ່ໂມເຊໄດ້ເຮັດໃນສາຍຕາຂອງຄົນອິສະຣາເອນທັງຫມົດ.

# ໂຢຊວຍ

1 [1]ບັດນີ້ ສິ່ງນີ້ໄດ້ເກີດຂຶ້ນ ຫລັງຈາກການເສຍຊີວິດຂອງໂມເຊຜູ້ຮັບໃຊ້ຂອງພຣະຢາເວ, ທີ່ພຣະຢາເວໄດ້ສັ່ງກັບໂຢຊວຍລູກຂອງນູນ,
ຜູ້ຊ່ວຍລະດັບຫົວຫນ້າຂອງໂມເຊວ່າ,[2]" ໂມເຊ, ຜູ້ຮັບໃຊ້ຂອງເຮົາ, ໄດ້ເສຍຊີວິດແລ້ວ. ດັ່ງນັ້ນ, ຈົ່ງລຸກຂຶ້ນຂ້ວາມແມ່ນ້ຳຈໍແດນນີ້, ເຈົ້າ ແລະ
ປະຊາຊົນທັງຫມົດໄປຍັງແຜ່ນດິນທີ່ເຮົາຈະຍົກໃຫ້ພວກເຂົາ - ປະຊາຊົນຂອງອິສະຣາເອນ.[3]ເຮົາໄດ້ຍົກໃຫ້ເຈົ້າທຸກແຫ່ງ
ທີ່ຕີນຂອງພວກເຈົ້າຈະຢຽບລົງໄປ. ເຮົາໄດ້ຍົກໃຫ້ແກ່ເຈົ້າແລ້ວດັ່ງທີ່ເຮົາໄດ້ສັນຍາໄວ້ກັບໂມເຊ.

[4]ຕັ້ງແຕ່ຖິ່ນທຸຣະກັນດານ ແລະ ພູເຂົາເລບານອນ, ໄປຈົນສຸດແມ່ນ້ຳໃຫຍ່ ຄືແມ່ນ້ຳເອິຟຣັດ, ແຜ່ນດິນທັງຫມົດຂອງຊາວຮິດຕີ, ແລະ
ເຖິງທະເລໃຫຍ່, ທາງທິດຕາເວັນຕົກ ຈະເປັນແຜ່ນດິນຂອງພວກເຈົ້າ.[5]ບໍ່ມີໃຜອາດຢືນຢັດຕໍ່ເຈົ້າໄດ້ຕະຫລອດຊີວິດຂອງເຈົ້າ.
ເຮົາຈະຢູ່ກັບເຈົ້າເຊັ່ນທີ່ເຮົາຢູ່ກັບໂມເຊມາແລ້ວ. ເຮົາຈະບໍ່ປະຖິ້ມຫລືຈາກເຈົ້າໄປ.
[6]ຈົ່ງເຂັ້ມແຂງ ແລະ ກ້າຫານເຖີດ.
ເຈົ້າຈະເຮັດໃຫ້ປະຊາຊົນເຫລົ່ານີ້ໄດ້ຮັບແຜ່ນດິນເປັນມໍຣະດົກຊຶ່ງເຮົາໄດ້ສັນຍາກັບບັນພະບຸຣຸດຂອງພວກເຂົາວ່າຈະຍົກໃຫ້ພວກເຂົາ.
[7]ຈົ່ງເຂັ້ມແຂງ ແລະ ກ້າຫານເຖີດຈົ່ງລະມັດຣະວັງທີ່ຈະເຊື່ອບັນຍັດທັງຫມົດທີ່ໂມເຊຜູ້ຮັບໃຊ້ຂອງເຮົາໄດ້ບັນຊາເຈົ້າ. ຈົ່ງຢ່າໄດ້ຫັນຂວາ ຫລື
ຫັນຊ້າຍ, ເພື່ອທີ່ເຈົ້າຈະພົບກັບຄວາມສຳເລັດບໍ່ວ່າເຈົ້າຈະໄປທາງໃດກໍຕາມ.
[8]ເຈົ້າຈະເຂົ້າເຝົ້າພາວັນນາທັງກາງເວັນ ແລະກາງຄືນເພື່ອທີ່ຈະສາມາດເຊື່ອຟັງທຸກສິ່ງທີ່ໄດ້ບັນທຶກໃນຫນັງສືນັ້ນ. ແລ້ວເຈົ້າຈະເຮີນຮຸ່ງເຮືອງ
ແລະ ປະສົບຄວາມສຳເລັດ.[9]ເຮົາສັ່ງເຈົ້າແລ້ວບໍ່ແມ່ນບໍ? ຈົ່ງເຂັ້ມແຂງ ແລະ ກ້າຫານເຖີດ! ຢ່າຢ້ານ, ຢ່າທໍ້ຖອຍ,
ພຣະຢາເວພຣະເຈົ້າຂອງເຈົ້າສະຖິດກັບເຈົ້າທຸກບ່ອນທີ່ເຈົ້າໄປ."
[10]ແລ້ວໂຢຊວຍກໍບັນຊາຜູ້ນຳທັງຫລາຍຂອງປະຊາຊົນ,[11]"ຈົ່ງໄປໃນຄ້າຍ ແລະ ສັ່ງປະຊາຊົນວ່າ, "ຈົ່ງຕຽມສະບຽງສຳລັບພວກທ່ານທັງຫລາຍ.
ໃນສາມວັນພວກທ່ານຈະຂ້ວາມແມ່ນ້ຳຈໍແດນນີ້ ແລະ ເຂົ້າໄປ ແລະ
ຍຶດແຜ່ນດິນທີ່ພຣະຢາເວພຣະເຈົ້າຂອງພວກທ່ານຊົງປຣະທານໃຫ້ພວກທ່ານຍຶດຄອງ."
[12]ຕໍ່ຊາວຣູເບັນ, ຊາວກາດ ແລະ ເຄິ່ງເຜົ່າຂອງຊາວມານາເຊ, ໂຢຊວຍເວົ້າວ່າ,[13]"ຈົ່ງຈື່ຄຳຂອງໂມເຊຜູ້ຮັບໃຊ້ຂອງພຣະຢາເວ,
ໄດ້ບັນຊາພວກທ່ານໄດ້ສັ່ງວ່າ, "ພຣະຢາເວພຣະເຈົ້າຂອງທ່ານຈະປຣະທານທີ່ພັກສຳລັບທ່ານ
ແລະພຣະອົງຈະຊົງປຣະທານແຜ່ນດິນນີ້ໃຫ້ທ່ານ."
[14]ເມຍຂອງທ່ານ, ລູກນ້ອຍຂອງທ່ານ, ແລະຝູງສັດລ້ຽງຂອງພວກທ່ານຈະຢູ່ໃນແຜ່ນດິນຊຶ່ງໂມເຊຍົກໃຫ້ທ່ານທີ່ຟາກຝັ່ງຂອງແມ່ນ້ຳຈໍແດນ.
ແຕ່ພວກນັກຮົບຂອງທ່ານຈະຂ້ວາມໄປກັບພວກພີ່ນ້ອງຂອງທ່ານ ແລະ ຊ່ວຍພວກເຂົາ.[15]ຈົນກວ່າພຣະຢາເວໄດ້ປຣະທານທີ່ພັກ
ແກ່ພີ່ນ້ອງຂອງທ່ານດັ່ງເຊັ່ນທີ່ພຣະອົງຊົງປຣະທານໃຫ້ແກ່ທ່ານ. ແລ້ວພວກເຂົາຈະໄດ້ຄອບຄອງແຜ່ນດິນທີ່ພຣະຢາເວພຣະເຈົ້າຂອງທ່ານ
ຊົງປຣະທານໃຫ້ພວກເຂົາ ແລ້ວທ່ານຈະກັບມາທີ່ແຜ່ນດິນຂອງທ່ານເອງ ແລະ ຄອບຄອງແຜ່ນດິນ,
ທີ່ໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ມອບໃຫ້ແກ່ທ່ານທີ່ຟາກແມ່ນ້ຳຈໍແດນ, ໃນທີ່ທິດຕາເວັນອອກ."
[16]ແລ້ວພວກເຂົາໄດ້ຕອບໂຢຊວຍວ່າ, "ທັງຫມົດທີ່ທ່ານໄດ້ບັນຊາພວກເຮົາ, ພວກເຮົາຈະເຮັດຕາມ ແລະ ບໍ່ວ່າທີ່ໃດທ່ານສົ່ງພວກເຮົາໄປ
ພວກເຮົາຈະໄປ.[17]ເຮົາຈະເຊື່ອຟັງທ່ານເຊັ່ນດຽວກັບທີ່ເຮົາເຊື່ອຟັງໂມເຊພຽງແຕ່ຂໍໃຫ້ພຣະຢາເວພຣະເຈົ້າຂອງທ່ານຊົງສະຖິດຢູ່ກັບທ່ານ,
ເຊັ່ນດຽວກັບທີ່ພຣະອົງຊົງສະຖິດຢູ່ກັບໂມເຊ.[18]ໃຜກໍຕາມທີ່ຂັດຂືນຄຳບັນຊາຂອງທ່ານ ແລະ ບໍ່ເຊື່ອຟັງຖ້ອຍຄຳຂອງທ່ານ.
ຄົນນັ້ນຈະຕ້ອງເຖິງຕາຍ. ຂໍພຽງແຕ່ຈົ່ງເຂັ້ມແຂງ ແລະ ກ້າຫານເຖີດ."

 generated on Tue Jun 17 19:01:42 2025

# 2

[1]ຕໍ່ມາໂຢຊວຍລູກຂອງນູນສົ່ງຊາຍສອງຄົນຈາກເມືອງຊິດຕິມເປັນການລັບໄປສອດແນມ. ເຂົາກ່າວວ່າ, "ຈົ່ງໄປ, ກວດກາເບິ່ງໃຫ້ທົ່ວແຜ່ນດິນ,
ສະເພາະຢ່າງຍິ່ງເມືອງເຢຣີໂກ." ພວກເຂົາກໍໄປ ແລະ ໄດ້ມາຮອດໃນບ້ານຂອງໂສເພນີຄົນຫນຶ່ງຊື່ຣາຮາບ, ແລະ ພວກເຂົາພັກຢູ່ທີ່ນັ້ນ.
[2]ມີລາຍງານໄປເຖິງກະສັດຂອງເມືອງເຢຣີໂກ ວ່າ, "ຈົ່ງເບິ່ງເຖີດ,
ຊາຍຊາວອິສະຣາເອນສອງຄົນໄດ້ມາທີ່ນີ້ເພື່ອສອດແນມເບິ່ງແຜ່ນດິນ."[3]ກະສັດຂອງເມືອງເຢຣີໂກ ໄດ້ຊົ່ງມີຄໍາສັ່ງໄປຍັງຣາຮາບ ແລະ ບອກວ່າ,
"ຈົ່ງນໍາຕົວຊາຍຜູ້ທີ່ມາຫາເຈົ້າ ເຂົ້າຢູ່ໃນບ້ານຂອງເຈົ້າ, ພວກເຂົາມາເພື່ອສອດແນມທົ່ວແຜ່ນດິນນີ້."

[4]ແຕ່ຜູ້ຍິງໄດ້ພາຊາຍສອງຄົນໄປ ແລະ ເຊື່ອງພວກເຂົາໄວ້. ນາງຕອບວ່າ, "ແມ່ນແລ້ວ, ພວກຜູ້ຊາຍມາຫາຂ້ອຍ,
ແຕ່ຂ້ອຍບໍ່ຮູ້ວ່າພວກເຂົາມາຈາກທີ່ແຫ່ງໃດ.[5]ພວກເຂົາກໍຈາກໄປເມື່ອເວລາຄໍ່າ, ເມື່ອເປັນເວລາທີ່ປະຕູປິດ. ຂ້ອຍບໍ່ຮູ້ວ່າພວກເຂົາໄປທີ່ແຫ່ງໃດ.
ທ່ານອາດຈະຈັບພວກເຂົາຖ້າທ່ານຮີບຕາມພວກເຂົາໄປ."
[6]ແຕ່ຍິງນັ້ນໄດ້ພາເຂົາທັງສອງຄົນຂຶ້ນໄປເທິງດາດຟ້າ ແລະ ກໍໄດ້ເຊື່ອງຕົວພວກເຂົາໄວ້ທີ່ຕົ້ນປ່ານທີ່ນາງ ໄດ້ລຽງໄວ້ເທິງຫລັງຄາ.
[7]ດັ່ງນັ້ນພວກຜູ້ຊາຍກໍໄລ່ຕາມຄົນທັງສອງ ໄປຈົນຮອດທ່າຂ້າມແມ່ນໍ້າຈໍແດນ. ປະຕູກໍຖືກປິດທັນທີທີ່ພວກຄົນໄລ່ຕາມນັ້ນອອກໄປແລ້ວ.
[8]ຊາຍທັງສອງຄົນຍັງບໍ່ນອນໃນຄືນນັ້ນ, ເມື່ອຜູ້ຍິງໄດ້ຂຶ້ນໄປຫາພວກເຂົາທີ່ເທິງດາດຟ້າ.[9]ນາງກ່າວວ່າ,
"ຂ້ອຍບໍ່ຮູ້ວ່າພຣະຢາເວໄດ້ຊົງມອບແຜ່ນດິນໃຫ້ແກ່ທ່ານ ແລະ ຄວາມຢ້ານພວກຂອງທ່ານມາເຫນືອພວກເຮົາ.
ບັນດາຄົນເຫລົ່ານັ້ນທີ່ອາໄສຢູ່ເທິງແຜ່ນດິນ ເກືອບຈະຫລອມລະລາຍຕໍ່ຫນ້າທ່ານ.
[10]ພວກເຂົາໄດ້ຍິນເລື່ອງທີ່ພຣະຢາເວໄດ້ເຮັດໃຫ້ນໍ້າຂອງທະເລແດງເຫືອດແຫ້ງໄປເພື່ອພວກທ່ານ ເມື່ອພວກທ່ານອອກມາຈາກເອຢິບ.
ພວກເຮົາໄດ້ຍິນເລື່ອງພວກທ່ານໄດ້ເຮັດໃຫ້ກະສັດສອງພະອົງຂອງຄົນອາໂມລິດອີກຝັ່ງຂອງແມ່ນໍ້າຈໍແດນ - ຄືສີໂຫນ ແລະ ໂອກ -
ຜູ້ຊຶ່ງຖືກຂ້າລົງຢ່າງສິ້ນເຊີງ.[11]ທັນທີທີ່ພວກເຮົາໄດ້ຍິນ ຫົວໃຈຂອງພວກເຮົາກໍເສຍຂວັນ, ແລະ
ບໍ່ມີຄວາມກ້າຫານເຫລືອໃນຄົນໃດເລີຍເພາະວ່າພຣະຢາເວພຣະເຈົ້າຂອງພວກທ່ານ - ພຣະອົງຊົງເປັນພຣະເຈົ້າ, ໃນສະຫວັນເບື້ອງເທິງ ແລະ
ເທິງແຜ່ນດິນໂລກເບື້ອງລຸ່ມ.
[12]ບັດນີ້ແລ້ວ, ຂໍສາບານຕໍ່ຂ້ານ້ອຍໃນນາມຂອງພຣະຢາເວວ່າ, ໃນເມື່ອຂ້ອຍໄດ້ສະແດງຄວາມເມດຕາຕໍ່ທ່ານແລ້ວ,
ທ່ານຈະສະແດງຄວາມເມດຕາຕໍ່ຄອບຄົວພໍ່ຂອງຂ້ອຍດ້ວຍ. ຈົ່ງໃຫ້ຂ້ອຍມີຫມາຍສໍາຄັນທີ່ແນ່ນອນ.[13]ວ່າທ່ານຈະໄວ້ຊີວິດພໍ່ຂອງຂ້ານ້ອຍ, ແມ່,
ອ້າຍ, ນ້ອງຊາຍ, ເອື້ອຍນ້ອງຍິງ, ແລະ ທຸກຄົນໃນຄອບຄົວຂອງພວກເຂົາ ແລະ ທ່ານຈະໄວ້ຊີວິດຂອງພວກເຮົາ."
[14]ພວກຜູ້ຊາຍນັ້ນຈຶ່ງຕອບນາງວ່າ, "ຊີວິດຂອງເຮົາເພື່ອຊີວິດຂອງພວກເຈົ້າ, ແມ່ນແຕ່ເຖິງຕາຍ! ຖ້າພວກເຈົ້າ
ບໍ່ເປີດເຜີຍພາຣະກິດນີ້ຂອງເຮົາກັບໃຜ, ເມື່ອພຣະຢາເວປຣະທານແຜ່ນດິນນີ້ແກ່ເຮົາ ພວກເຮົາຈະມີຄວາມເມດຕາ ແລະ ສັດຊື່ຕໍ່ພວກເຈົ້າ."
[15]ດັ່ງນັ້ນນາງຈຶ່ງຢ່ອນພວກເຂົາລົງທາງປ່ອງຢ້ຽມໂດຍໃຊ້ເຊືອກ. ບ້ານທີ່ນາງອາໄສຢູ່ໄດ້ສ້າງໃນກໍາແພງຂອງເມືອງ.
[16]ນາງໄດ້ກ່າວກັບພວກເຂົາວ່າ, "ຈົ່ງໄປທີ່ເນີນພູ ແລະ ລີ້ຢູ່ທີ່ນັ້ນເພື່ອພວກຜູ້ໄລ່ນໍາຈະບໍ່ເຫັນພວກທ່ານ. ຈົ່ງລີ້ຢູ່ທີ່ນັ້ນສາມມື້
ຈົນກວ່າພວກທີ່ໄລ່ນໍາທ່ານຈະກັບ. ແລ້ວທ່ານກໍເດີນທາງຕໍ່ໄປ."[17]ພວກຜູ້ຊາຍເວົ້າກັບນາງວ່າ, "ເຮົາຈະບໍ່ຜູກມັດຕາມຄໍາສັນຍາທີ່ເຮົາສາບານ,
ຖ້າເຈົ້າບໍ່ເຮັດສິ່ງນີ້.
[18]ເມື່ອພວກເຮົາໄດ້ເຂົ້າມາໃນແຜ່ນດິນນີ້, ເຈົ້າຈົ່ງເອົາເຊືອກສີແດງນີ້ຜູກໄວ້ທີ່ປ່ອງຢ້ຽມທີ່ເຈົ້າໄດ້ຢ່ອນພວກເຮົາລົງໄປນັ້ນ, ແລະ
ເຈົ້າຈົ່ງຮວບຮວມພໍ່ແມ່ພີ່ນ້ອງ ແລະ ທຸກຄົນໃນຄອບຄົວຂອງພໍ່ມາໄວ້ໃນບ້ານ.[19]ໃຜກໍຕາມທີ່ອອກນອກປະຕູບ້ານຂອງເຈົ້າໄປທີ່ຫົນທາງ,
ເລືອດຂອງພວກເຂົາຈະຢູ່ເທິງຫົວຂອງພວກເຂົາ ແລະ ເຮົາຈະບໍ່ມີຄວາມຜິດ ແຕ່ຖ້າມືໃດມາແຕະຕ້ອງໃຜກໍຕາມທີ່ຢູ່ໃນບ້ານ,
ເລືອດຂອງເຂົາຈະຢູ່ເທິງຫົວຂອງເຮົາ.
[20]ແຕ່ຖ້າເຈົ້າເວົ້າກ່ຽວກັບພາຣະກິດຂອງເຮົາ, ເຮົາກໍຈະພົ້ນຈາກຄໍາສາບານທີ່ພວກເຈົ້າໃຫ້ເຮົາສາບານໄວ້ນັ້ນ."[21]ຣາຮາບໄດ້ຕອບວ່າ,
"ຂໍໃຫ້ເປັນໄປຕາມທ່ານໄດ້ເວົ້ານັ້ນ." ນາງກໍສົ່ງພວກເຂົາໄປ ແລ້ວນາງໄດ້ມັດເຊືອກສີແດງທີ່ປ່ອງຢ້ຽມນັ້ນ.
[22]ພວກເຂົາໄດ້ຈາກໄປ ແລະ ໄດ້ຂຶ້ນໄປຍັງເນີນພູ ແລະ ພວກເຂົາໄດ້ຢູ່ທີ່ນັ້ນສາມມື້ຈົນກະທັ້ງພວກຄົນທີ່ໄລ່ນໍາພວກເຂົາໄດ້ກັບໄປ.
ພວກຄົນທີ່ຕິດຕາມໄດ້ຫາຕະຫລອດທາງ ແຕ່ບໍ່ເຫັນຫຍັງເລີຍ.
[23]ຊາຍສອງຄົນກໍກັບໄປ ແລະ ຂ້າມກັບໄປຫາໂຢຊວຍລູກຂອງນູນ, ແລະ ພວກເຂົາໄດ້ບອກເຂົາທຸກສິ່ງທີ່ໄດ້ເກີດກັບພວກເຂົາ.
[24]ພວກເຂົາກ່າວແກ່ໂຢຊວຍວ່າ, "ແທ້ຈິງແລ້ວ ພຣະຢາເວໄດ້ມອບແຜ່ນດິນທັງຫມົດໄວ້ໃນມືເຮົາແລ້ວ.
ຊາວເມືອງທຸກຄົນໃນແຜ່ນດິນກໍຢ້ານວ່າເພາະພວກເຮົາ."

3 [1]ໂຢຊວຍຕື່ນແຕ່ເຊົ້າ, ແລະ ພວກເຂົາອອກຈາກຊິດຕີມ. ພວກເຂົາ ແລະ ປະຊາຊົນອິສະຣາເອນທັງຫມົດມາເຖິງແມ່ນ້ຳຈໍແດນ, ແລະ
ພວກເຂົາຕັ້ງຄ້າຍພັກບ່ອນນັ້ນກ່ອນຈະຂ້ວາມໄປ.

[2]ຕໍ່ມາອີກສາມມື້, ພວກເຈົ້າຫນ້າທີ່ກໍໄປທົ່ວຄ້າຍ;[3]ພວກເຂົາໄດ້ສັ່ງປະຊາຊົນວ່າ,
"ເມື່ອພວກທ່ານເຫັນຫີບພັນທະສັນຍາແຫ່ງພຣະຢາເວພຣະເຈົ້າຂອງທ່ານ, ແລະ
ເຫັນພວກປະໂລຫິດຊຶ່ງມາຈາກຊົນເຜົ່າເລວີຫາມໄປພວກທ່ານຈະຕ້ອງອອກຈາກສະຖານທີ່ແຫ່ງນີ້ແລະນຳໄປ.
[4]ຈະຕ້ອງມີໄລຍະຫ່າງລະຫ່ວາງພວກທ່ານ ແລະ ຫີບປະມານຫນຶ່ງກິໂລແມັດ. ຈົ່ງຢ່າເຂົ້າໄປໃກ້ຫີບນັ້ນ ເພື່ອພວກທ່ານຈະໄດ້ຮູ້ຈັກທາງທີ່ຈະໄປ,
ເພາະພວກທ່ານຍັງບໍ່ເຄີຍໄປທາງນີ້ມາກ່ອນ."
[5]ໂຢຊວຍກ່າວກັບປະຊາຊົນວ່າ, "ຈົ່ງຊຳຣະຕົວຂອງພວກທ່ານໃຫ້ບໍຣິສຸດໃນມື້ອື່ນນີ້
ເພາະພຣະຢາເວຈະຊົງເຮັດການອັສະຈັນທ່າມກາງພວກທ່ານ."[6]ແລ້ວໂຢຊວຍໄດ້ສັ່ງພວກປະໂລຫິດວ່າ, "ຈົ່ງຫາມຫີບພັນທະສັນຍາ,
ແລະຜ່ານໄປທາງຫນ້າປະຊາຊົນ." ດັ່ງນັ້ນພວກເຂົາກໍຫາມຫີບພັນທະສັນຍາ ແລະ ຍ່າງໄປທາງຫນ້າປະຊາຊົນ.
[7]ພຣະຢາເວໄດ້ບອກກັບໂຢຊວຍວ່າ, "ໃນມື້ນີ້ເຮົາຈະໃຫ້ເຈົ້າເປັນຊາຍທີ່ຍິ່ງໃຫຍ່ ໃນສາຍຕາຂອງຊາວອິສະຣາເອນທັງມວນ.
ພວກເຂົາຈະໄດ້ຮູ້ວ່າ ເຮົາຢູ່ກັບໂມເຊມາແລ້ວຢ່າງໃດ, ເຮົາກໍຈະຢູ່ກັບພວກເຈົ້າຢ່າງນັ້ນ.[8]ເຈົ້າຈະສັ່ງປະໂລຫິດຜູ້ຫາມຫີບພັນທະສັນຍາວ່າ,
"ເມື່ອພວກທ່ານມາຮອດແຄມແມ່ນ້ຳຈໍແດນ, ພວກທ່ານຈະຢຸດຢືນຢູ່ໃນແມ່ນ້ຳຈໍແດນ."
[9]ແລ້ວໂຢຊວຍກໍໄດ້ກ່າວແກ່ປະຊາຊົນອິສະຣາເອນວ່າ, "ຈົ່ງມາບ່ອນນີ້, ແລະ ຟັງຖ້ອຍຄຳທີ່ພຣະຢາເວພຣະເຈົ້າຂອງທ່ານ.
[10]ໂດຍເຫດນີ້ພວກທ່ານທັງຫລາຍຈະໄດ້ຮູ້ວ່າ ພຣະເຈົ້າ, ຜູ້ຊົງພຣະຊົນຢູ່ສະຖິດຢູ່ທ່າມກາງທ່ານທັງຫລາຍ ແລະ ຈະຊົງຂັບໄລ່ ຄົນການາອານ,
ຄົນຮິດຕີ, ຄົນຮີວີ, ຄົນເປຣິຊີ, ຄົນກີກາຊີ, ຄົນອາໂມລິດ, ແລະຄົນເຢບຸດໃຫ້ພົ້ນຫນ້າທ່ານທັງຫລາຍ.[11]ຈົ່ງເບິ່ງນັ້ນ!
ຫີບພັນທະສັນຍາຂອງອົງພຣະຜູ້ເປັນເຈົ້າ, ແຫ່ງໂລກທັງມວນຈະຂ້ວາມໄປທາງຫນ້າທ່ານລົງໄປໃນແມ່ນ້ຳຈໍແດນ.
[12]ບັດນີ້ຈົ່ງເລືອກຄົນສິບສອງຄົນອອກຈາກເຜົ່າຂອງອິສະຣາເອນ, ເຜົ່າລະຫນຶ່ງຄົນ.[13]ເມື່ອຕີນຂອງພວກປະໂລຫິດຜູ້ຫາມຫີບຂອງພຣະຢາເວ,
ອົງພຣະຜູ້ເປັນເຈົ້າ, ແຫ່ງໂລກທັງມວນ ແຕະແມ່ນ້ຳຈໍແດນຈະແຍກອອກ, ແລະ ແມ່ນແຕ່ນ້ຳທີ່ໄຫລມາຈາກທາງເທິງຈະຢຸດໄຫລ ແລະ
ຈະຕັ້ງຂຶ້ນເປັນກອງດຽວ."
[14]ດັ່ງນັ້ນ ເມື່ອປະຊາຊົນໄດ້ອອກເດີນທາງເພື່ອຈະຂ້ວາມແມ່ນ້ຳຈໍແດນ, ພວກປະໂລຫິດທີ່ຫາມຫີບພັນທະສັນຍາໄປທາງຫນ້າປະຊາຊົນ.
[15]ທັນທີທີ່ຄົນເຫລົ່ານັ້ນທີ່ແບກຫີບພັນທະສັນຍາມາຮອດແມ່ນ້ຳຈໍແດນ, ແລະ ຕີນຂອງຄົນເຫລົ່ານັ້ນທີ່ຫາມຫີບຈຸ່ມລົງທີ່ແມ່ນ້ຳແລ້ວ
(ຂະນະນັ້ນແມ່ນ້ຳຈໍແດນໄຫລຖ້ວມຝັ່ງຕະຫລອດຣະດູເກັບກ່ຽວ),[16]ນ້ຳທີ່ໄຫລມາຈາກທາງເທິງກໍຢຸດເປັນກອງດຽວ.ນ້ຳຢຸດໄຫລຈາກໄລຍະໄກ.
ນ້ຳຢຸດໄຫລຈາກເມືອງອາດາມ, ຊຶ່ງເປັນເມືອງຂ້າງໆເມືອງຊາເຣທານ, ແລະ ນ້ຳທີ່ໄຫລລົງເນເກບ, ທະເລເກືອ.
ປະຊາຊົນກໍຂ້ວາມໄປໃກ້ເມືອງເຢຣີໂກ.
[17]ພວກປະໂລຫິດທີ່ຫາມຫີບພັນທະສັນຍາຂອງພຣະຢາເວຢືນເທິງພື້ນດິນແຫ້ງກາງແມ່ນ້ຳຈໍແດນ
ຈົນກວ່າປະຊາຊົນອິສະຣາເອນທັງຫມົດຍ່າງຂ້ວາມໄປເທິງພື້ນດິນແຫ້ງ.

 generated on Tue Jun 17 19:01:42 2025

4 [1]ເມື່ອປະຊາຊົນອິສະຣາເອນທັງຫມົດໄດ້ຂ້າມແມ່ນ້ຳຈໍແດນແລ້ວ, ພຣະຢາເວໄດ້ກ່າວສັ່ງໂຢຊວຍວ່າ.
[2]"ຈົ່ງເລືອກຄົນສິບສອງຄົນໃນຫມູ່ປະຊາຊົນ, ເຜົ່າລະຄົນ.[3]ໃຫ້ສັ່ງພວກເຂົາວ່າ: 'ຈົ່ງເອົາກ້ອນຫີນສິບສອງກ້ອນຈາກກາງແມ່ນ້ຳຈໍແດນ
ບ່ອນທີ່ພວກປະໂລຫິດໄດ້ຢືນເທິງພື້ນທີ່ແຫ້ງ, ແລະ ໃຫ້ຂົນກ້ອນຫີນມາກັບທ່ານແລະ ໃຫ້ວາງລົງເທິງໃນບ່ອນທີ່ພວກທ່ານຈະນອນໃນຄືນນີ້."'

[4]ແລ້ວໂຢຊວຍໄດ້ເອີ້ນຄົນສິບສອງຄົນທີ່ທ່ານໄດ້ຄັດເລືອກມາຈາກເຜົ່າຕ່າງໆ ຂອງອິສະຣາເອນ, ເຜົ່າລະຄົນ.[5]ໂຢຊວຍໄດ້ກ່າວກັບພວກເຂົາວ່າ,
"ຈົ່ງໄປທາງຫນ້າຫີບຂອງພຣະຢາເວພຣະເຈົ້າຂອງພວກທ່ານ ໄປຍັງກາງແມ່ນ້ຳຈໍແດນ.
ໃຫ້ພວກທ່ານແຕ່ລະຄົນຍົກກ້ອນຫີນຄົນລະກ້ອນແບກຂຶ້ນບ່າຕາມຈຳນວນຂອງເຜົ່າຕ່າງໆ ຂອງປະຊາຊົນອິສະຣາເອນ.
[6]ນີ້ຈະເປັນສັນຍາລັກໃນທ່າມກາງພວກທ່ານເມື່ອບັນດາລູກຫລານພວກທ່ານຈະຖາມໃນວັນຂ້າງຫນ້າວ່າ,
"ກ້ອນຫີນເຫລົ່ານີ້ມີຄວາມຫມາຍຫຍັງສຳລັບທ່ານ?[7]ແລ້ວທ່ານຈົ່ງຕອບພວກເຂົາວ່າ, "ນ້ຳຂອງແມ່ນ້ຳຈໍແດນແຍກຈາກກັນ
ຕໍ່ຫນ້າຫີບພັນທະສັນຍາແຫ່ງພຣະຢາເວ, ເມື່ອຫີບໄດ້ຂ້າມແມ່ນ້ຳຈໍແດນກໍແຍກຈາກກັນ, ດັ່ງນັ້ນ ກ້ອນຫີນເຫລົ່ານີ້
ຈະເປັນສິ່ງເຕືອນຄວາມຊົງຈຳຂອງປະຊາຊົນຂອງອິສະຣາເອນຕະຫລອດໄປ.'"
[8]ປະຊາຊົນຊາວອິດສະຣາເອນ ໄດ້ເຮັດຕາມໂຢຊວຍໄດ້ສັ່ງນັ້ນ, ແລະ ພວກເຂົາຂົນກ້ອນຫີນສິບສອງກ້ອນມາຈາກກາງແມ່ນ້ຳຈໍແດນ,
ຕາມທີ່ພຣະຢາເວໄດ້ເວົ້າກັບໂຢຊວຍ. ພວກເຂົາໄດ້ກໍ່ກ້ອນຫີນຂຶ້ນຕາມຈຳນວນເຜົ່າຂອງປະຊາຊົນອິສະຣາເອນ.
ພວກເຂົາແບກກ້ອນຫີນມາຍັງສະຖານທີ່, ທີ່ພວກເຂົາຕັ້ງຄ້າຍພັກຢູ່ ແລະ ໄດ້ກໍ່ພວກມັນຂຶ້ນໃນທີ່ນັ້ນ.
[9]ແລ້ວໂຢຊວຍໄດ້ກໍ່ກ້ອນຫີນສິບສອງກ້ອນທີ່ກາງແມ່ນ້ຳຈໍແດນ,
ໃນບ່ອນທີ່ຕີນຂອງພວກປະໂລຫິດທີ່ໄດ້ຫາມຫີບພຣະບັນຍັດຂອງພັນທະສັນຍາຢືນຢູ່. ສິ່ງເຕືອນຄວາມຊົງຈຳຍັງຢູ່ທີ່ນັ້ນຈົນຮອດມື້ນີ້.
[10]ພວກປະໂລຫິດທີ່ຫາມຫີບຄຳສັນຍາຢືນຢູ່ກາງແມ່ນ້ຳຈໍແດນຈົນກວ່າທຸກສິ່ງທີ່ພຣະຢາເວ, ໄດ້ສັ່ງໂຢຊວຍໃຫ້ບອກປະຊາຊົນໄດ້ສຳເລັດ,
ຕາມທີ່ໂມເຊໄດ້ບັນຊາໂຢຊວຍທຸກປະການ. ປະຊາຊົນຈຶ່ງຟ້າວຂ້າມແມ່ນ້ຳໄປ.[11]ເມື່ອປະຊາຊົນຂ້າມໄປຫມົດແລ້ວ, ຫີບຂອງພຣະຢາເວ,
ແລະ ພວກປະໂລຫິດກໍ່ຂ້າມໄປຕໍ່ຫນ້າປະຊາຊົນ.
[12]ຄົນເຜົ່າຄົນຣູເບັນ, ຄົນເຜົ່າກາດ, ແລະ ເຄິ່ງຫນຶ່ງຂອງຄົນເຜົ່າມານາເຊ ໄດ້ຂ້າມໄປ ຕໍ່ຫນ້າປະຊາຊົນອິສະລາເອນ ໄດ້ຈັດຕັ້ງເປັນກອງທັບ,
ຕາມທີ່ໂມເຊໄດ້ສັ່ງໄວ້ກັບພວກເຂົາ.[13]ມີຄົນຖືອາວຸດຄົບມືພ້ອມທີ່ຈະເຂົ້າເຮັດເສິກປະມານສີ່ສິບພັນຄົນ, ໄດ້ຂ້າມໄປຢູ່ຊ້ອງຫນ້າພຣະຢາເວ,
ເພື່ອໄປສູ່ທົ່ງຮາບພຽງຂອງເມືອງເຢຣີໂກ.[14]ໃນມື້ນັ້ນພະຢາເວ, ໄດ້ຊົງເຮັດໃຫ້ໂຢຊວຍຍິ່ງໃຫຍ່ໃນສາຍຕາຂອງອິສະຣາເອນທັງຫມົດ.
ເຂົາທັງຫລາຍກໍ່ຍົກຍ້ອງທ່ານ ດັ່ງທີ່ພວກເຂົາເຄີຍຍົກຍ້ອງໂມເຊ ມາຕະຫລອດຊີວິດຂອງທ່ານ.
[15]ແລ້ວພຣະຢາເວໄດ້ກ່າວກັບໂຢຊວຍວ່າ,[16]"ຈົ່ງສັ່ງພວກປະໂລຫິດຜູ້ທີ່ຫາມຫີບແຫ່ງສັກຂີພະຍານໃຫ້ຂຶ້ນມາຈາກແມ່ນ້ຳຈໍແດນ."
[17]ດັ່ງນັ້ນ, ໂຢຊວຍໄດ້ສັ່ງພວກປະໂລຫິດ,
"ຈົ່ງຂຶ້ນມາຈາກແມ່ນ້ຳຈໍແດນ."[18]ເມື່ອພວກປະໂຫິດຜູ້ຫາມຫີບຄຳສັນຍາແຫ່ງພຣະຢາເວຂຶ້ນມາຈາກກາງແມ່ນ້ຳຈໍແດນ, ແລະ
ຕີນຂອງພວກເຂົາຍົກຂຶ້ນຢຽບແຜ່ນດິນແຫ້ງແລ້ວ, ແລ້ວນ້ຳໃນແມ່ນ້ຳຈໍແດນກໍໄຫລກັບມາຍັງບ່ອນເກົ່າ, ແລະ
ຖ້ວມສອງຝັ່ງເຫມືອນເດີມຢ່າງເມື່ອສີ່ວັນກ່ອນ.
[19]ປະຊາຊົນໄດ້ຂຶ້ນຈາກແມ່ນ້ຳຈໍແດນໃນວັນທີສິບເດືອນທີຫນຶ່ງ. ພວກເຂົາພັກທີ່ກິນການ, ດ້ານທິດຕາເວັນອອກຂອງເມືອງເຢຣີໂກ.
[20]ກ້ອນຫີນສິບສອງກ້ອນທີ່ພວກເຂົານຳມາຈາກແມ່ນ້ຳຈໍແດນ, ໂຢຊວຍກໍໄດ້ຕັ້ງໄວ້ໃນກິນການ.[21]ເຂົາໄດ້ກ່າວກັບປະຊາຊົນອິສະຣາເອນວ່າ,
"ເມື່ອລູກຫລານຂອງທ່ານຖາມພໍ່ຂອງພວກເຂົາວ່າໃນເວລາຂ້າງຫນ້າວ່າ, "ກ້ອນຫີນເຫລົ່ານີ້ແມ່ນຫຍັງ?'
[22]ຈົ່ງບອກລູກຫລານຂອງທ່ານວ່າ, 'ນີ້ເປັນສະຖານທີ່,
ທີ່ຊົນຊາດອິສະຣາເອນຂ້າມແມ່ນ້ຳຈໍແດນເທິງແຜ່ນດິນແຫ້ງ.'[23]ພຣະຢາເວພຣະເຈົ້າຂອງພວກທ່ານຊົງເຮັດໃຫ້ນ້ຳໃນແມ່ນ້ຳຈໍແດນແຫ້ງເພື່ອພວກທ່ານ,
ຈົນພວກທ່ານໄດ້ຂ້າມໄປ ດັ່ງທີ່ພຣະຢາເວພຣະເຈົ້າ, ຂອງພວກທ່ານໄດ້ເຮັດແກ່ທະເລແດງ,
ຊຶ່ງພຣະອົງເຮັດໃຫ້ແຫ້ງເພື່ອພວກເຮົາຈົນກວ່າພວກເຮົາຂ້າມໄປໄດ້ຫມົດ.[24]ດັ່ງນັ້ນ
ປະຊາຊົນທັງຫມົດເທິງແຜ່ນດິນຈະໄດ້ຮູ້ວ່າພຣະຫັດຂອງພຣະຢາເວຊົງອານຸພາບ, ແລະ
ເພື່ອພວກທ່ານຈະສັນຣະເສີນພຣະຢາເວພຣະເຈົ້າຂອງທ່ານນິດນິຣັນດອນ.


generated on Tue Jun 17 19:01:42 2025

5 [1]ທັນທີທີ່ກະສັດທັງຫມົດຂອງຄົນອາໂມຣິດຊຶ່ງຢູ່ຟາກຕາເວັນຕົກຂອງແມ່ນ້ຳຈໍແດນ, ແລະ ກະສັດທັງຫມົດຂອງຄົນການາອານ, ຊຶ່ງຢູ່ແຄມຝັ່ງທະເລໃຫຍ່,
ໄດ້ຍິນວ່າພຣະຢາເວໄດ້ຊົງໃຫ້ນ້ຳໃນແມ່ນ້ຳຈໍແດນເຫືອດແຫ້ງໄປຈົນກວ່າປະຊາຊົນອິສະຣາເອນໄດຂ້ວາມຟາກໄປໄດ້,
ຫົວໃຈຂອງພວກເຂົາກໍຫົດຫູ່ ແລະ ບໍ່ມີກຳລັງໃຈເພາະພວກປະຊາຊົນອິສະຣາເອນ.

[2]ໃນເວລານັ້ນພຣະຢາເວໄດ້ກ່າວກັບໂຢຊວຍວ່າ, "ຈົ່ງເຮັດມີດດ້ວຍຫີນ ແລະ
ຈົ່ງໃຫ້ຜູ້ຊາຍອິສະຣາເອນທັງຫມົດເຂົ້າພິທີຕັດອີກຄັ້ງ."[3]ແລ້ວໂຢຊວຍໄດ້ເຮັດມີດຫີນ ແລະ
ເຮັດພິທີຕັດໃຫ້ຜູ້ຊາຍທັງຫມົດຂອງອິສະຣາເອນທີ່ກິເບອັນ ຮາອາຣາໂລດ.
[4]ນີ້ແມ່ນສາເຫດທີ່ໂຢຊວຍເຮັດພິທີຕັດພວກເຂົາຄື:
ຜູ້ຊາຍທຸກຄົນທີ່ອອກມາຈາກເອຢິບລວມທັງທະຫານທັງຫມົດທີ່ໄດ້ເສຍຊີວິດຕາມທາງໃນຖິ່ນທຸຣະກັນດານ,
ຫລັງຈາກທີ່ພວກເຂົາໄດ້ອອກມາຈາກເອຢິບ.[5]ເຖິງແມ່ນວ່າຜູ້ຊາຍທຸກຄົນທີ່ອອກມາຈາກເອຢິບ ຈະໄດ້ເຂົ້າພິທີຕັດຫມົດແລ້ວ,
ແຕ່ບໍ່ມີເດັກຊາຍຄົນໃດທີ່ເກີດໃນຖິ່ນທຸຣະກັນດານ ຫລັງຈາກອອກມາຈາກເອຢິບນັ້ນໄດ້ເຂົ້າພິທີຕັດເລີຍ.
[6]ສຳລັບປະຊາຊົນຂອງອິສະຣາເອນທີ່ເດີນທາງສີ່ສິບປີ ໃນຖິ່ນທຸຣະກັນດານຈົນກວ່າປະຊາຊົນທຸກຄົນກ່າວຄື,
ປະຊາຊົນທຸກຄົນທີ່ເປັນນັກຮົບທີ່ໄດ້ອອກມາຈາກເອຢິບ, ໄດ້ເສຍຊີວິດ, ເພາະວ່າພວກເຂົາບໍ່ໄດ້ເຊື່ອຟັງສຽງຂອງພຣະຢາເວ.
ພຣະຢາເວໄດ້ຊົງສັນຍາກັບພວກເຂົາໄວ້ວ່າ ພຣະອົງຈະບໍ່ອະນຸຍາດໃຫ້ພວກເຂົາ ໄດ້ເຫັນແຜ່ນດິນທີ່ພຣະອົງ,
ຊົງສັນຍາໄວ້ກັບບັນພະບຸຣຸດຂອງພວກເຂົາວ່າ ພຣະອົງຈະປຣະທານ, ແຜ່ນດິນທີ່ມີນ້ຳນົມ ແລະ ນ້ຳເຜິ້ງເຕັມລົ້ນໃຫ້ເຮົາ.
[7]ມີແຕ່ລູກຫລານຂອງພວກເຂົາທີ່ພຣະຢາເວ, ໄດ້ຊົງໃຫ້ມາແທນພວກເຂົານັ້ນທີ່ໂຢຊວຍໄດ້ເຮັດພິທີຕັດ,
ເພາະວ່າພວກເຂົາບໍ່ໄດ້ເຂົ້າພິທີຕັດໃນລະຫວ່າງທາງ.
[8]ເມື່ອພວກເຂົາທັງຫມົດເຂົ້າພິທີຕັດແລ້ວ ພວກເຂົາກໍພັກໃນບ່ອນທີ່ພວກເຂົາຕັ້ງຄ້າຍ ຈົນພວກເຂົາດີເປັນປົກກະຕິ.[9]ແລ້ວພຣະຢາເວ,
ກ່າວກັບໂຢຊວຍວ່າ, "ວັນນີ້ເຮົາໄດ້ໃຫ້ພວກເຈົ້າພົ້ນຈາກຄວາມອັບອາຍຂອງເອຢິບໄປຈາກພວກເຈົ້າແລ້ວ." ດັ່ງນັ້ນ,
ສະຖານທີ່ນັ້ນໄດ້ຖືກເອີ້ນວ່າກິນການຈົນເຖິງທຸກວັນນີ້.
[10]ປະຊາຊົນຂອງອິສະຣາເອນທີ່ຢູ່ໃນກິນການ. ໃນຕອນຄ່ຳຂອງວັນທີສິບສີ່ຂອງເດືອນ,
ພວກເຂົາໄດ້ຖືເທສະການປັສະຄາຕາມທົ່ງຮາບພຽງຂອງເຢຣີໂກ.[11]ພວກເຂົາໄດ້ກິນຜົນບາງຢ່າງ ຂອງແຜ່ນດິນນັ້ນ
ໃນວັນຫລັງຈາກເທສະການປັສະຄາ: ຄືເຂົ້າຂົ້ວ ແລະ ເຂົ້າຈີ່ບໍ່ມີເຊື້ອແປ້ງ.
[12]ມານາກໍຂາດຫາຍໄປ ຫລັງຈາກທີ່ພວກເຂົາໄດ້ກິນຜົນຈາກແຜ່ນດິນ. ບໍ່ມີມານາສຳລັບປະຊາຊົນອິສະຣາເອນອີກຕໍ່ໄປ,
ແຕ່ພວກເຂົາກິນຜົນຂອງແຜ່ນດິນການາອານໃນປີນັ້ນ.
[13]ເມື່ອໂຢຊວຍເຂົ້າໃກ້ເມືອງເຢຣີໂກ, ເຂົາໄດ້ເງີຍຫນ້າຂຶ້ນເບິ່ງ, ແລະ ນີ້ເດ, ຊາຍຄົນຫນຶ່ງກຳລັງຢືນຢູ່ຕໍ່ຫນ້າເຂົາ; ເຂົາໄດ້ຊັກດາບຂອງເຂົາແລະ
ຖືຢູ່ໃນມືຂອງເຂົາ. ໂຢຊວຍໄດ້ເຂົ້າໄປຫາເຂົາ ແລະ ກ່າວວ່າ, "ທ່ານຢູ່ຝ່າຍເຮົາ ຫລື ຝ່າຍສັດຕຣູຂອງເຮົາ?"
[14]"ບໍ່ແມ່ນທັງສອງຢ່າງເຮົາເປັນຜູ້ບັນຊາການທັບຂອງພຣະຢາເວ. ບັດນີ້ເຮົາໄດ້ມາແລ້ວ.
"ແລ້ວໂຢຊວຍກໍກາບລົງເຖິງພື້ນດິນເພື່ອນະມັສະການແລ້ວຖາມເຂົາວ່າ,
"ເຈົ້ານາຍຂອງຂ້ານ້ອຍຈະກ່າວສິ່ງໃດກັບຜູ້ຮັບໃຊ້ຂອງທ່ານ?"[15]ຜູ້ບັນຊາການທັບຂອງພຣະຢາເວໄດ້ເວົ້າກັບໂຢຊວຍວ່າ,
"ຈົ່ງຖອດເກີບຂອງເຈົ້າອອກຈາກຕີນຂອງເຈົ້າເສຍ, ເພາະວ່າບ່ອນທີ່ເຈົ້າກຳລັງຢືນຢູ່ນີ້ເປັນບ່ອນສັກສິດ." ໂຢຊວຍກໍເຮັດຕາມ.


generated on Tue Jun 17 19:01:42 2025

6 1ບັດນີ້ທາງເຂົ້າເມືອງເຢຣີໂກ, ທັງຫມົດກໍຖືກປິດເພາະເຫດແຫ່ງກອງທັບຂອງອິສະຣາເອນ. ບໍ່ມີຜູ້ໃດອອກ ແລະ ບໍ່ມີຜູ້ໃດເຂົ້າ.
2ພຣະຢາເວໄດ້ກ່າວກັບໂຢຊວຍວ່າ, "ຈົ່ງເບິ່ງເຖີດເຮົາໄດ້ມອບເມືອງເຢຣີໂກທັງກະສັດຂອງເມືອງ, ແລະ
ເຫລົ່າທະຫານທີ່ຝຶກຝົນຂອງເມືອງໄວ້ໃນມືພວກເຈົ້າແລ້ວ.

3ພວກເຈົ້າຈະຕ້ອງຍ່າງອ້ອມເມືອງນີ້, ພວກທະຫານຍ່າງຮອບເມືອງຫນຶ່ງຄັ້ງ. ພວກເຈົ້າຈະຕ້ອງເຮັດເຊັ່ນນີ້ເປັນເວລາຫົກວັນ.
4ພວກປະໂລຫິດເຈັດຄົນຈະຕ້ອງຖືແກເຂົາແກະເຈັດອັນນຳຫນ້າຫີບ. ໃນວັນທີເຈັດ, ພວກເຈົ້າຈົ່ງຍ່າງອ້ອມເມືອງເຈັດຮອບ, ແລະ
ໃຫ້ພວກປະໂລຫິດເປົ່າແກ.
5ແລ້ວພວກເຂົາຈະຕ້ອງເປົ່າເຂົາແກະເປັນສຽງຍາວໆ, ແລະ ເມື່ອພວກເຈົ້າໄດ້ຍິນສຽງແກນັ້ນ ປະຊາຊົນທຸກຄົນຈະຕ້ອງໂຫ່ຮ້ອງຂຶ້ນສຽງດັງໆ,
ແລະ ກຳແພງເມືອງກໍຈະເຈື່ອນລົງ. ເຫລົ່າທະຫານຈະຕ້ອງໂຈມຕີ, ແຕ່ລະຄົນມຸ່ງໄປຂ້າງຫນ້າ."
6ໂຢຊວຍລູກຂອງນູນຈຶ່ງເອີ້ນພວກປະໂລຫິດແລະ ເວົ້າກັບພວກເພິ່ນວ່າ, "ຈົ່ງຍົກຫີບແຫ່ງພັນທະສັນຍາຂຶ້ນຫາມ, ແລະ
ໃຫ້ປະໂລຫິດເຈັດຄົນຖືແກເຂົາແກະເຈັດອັນ, ຍ່າງນຳຫນ້າຫີບແຫ່ງພຣະຢາເວ,"7ເຂົາໄດ້ກ່າວກັບປະຊາຊົນວ່າ " ຈົ່ງໄປ ແລະ
ຍ່າງອ້ອມຮອບເມືອງ, ແລະ ໃຫ້ທະຫານອາວຸດຄົບມືຈະເດີນຂ້າງຫນ້າຫີບແຫ່ງພຣະຢາເວ."
8ເມື່ອໂຢຊວຍໄດ້ເວົ້າກັບປະຊາຊົນແລ້ວໆ, ພວກປະໂລຫິດເຈັດຄົນໄດ້ຖືແກເຂົາແກະເຈັດອັນຕໍ່ຫນ້າພຣະຢາເວ. ຂະນະທີ່ຍ່າງໄປຂ້າງຫນ້າ
ພວກເຂົາກໍໄດ້ເປົ່າແກ. ຫີບແຫ່ງພັນທະສັນຍາຂອງພຣະຢາເວ, ກໍໄດ້ຕາມຫລັງພວກເຂົາ.
9ເຫລົ່າທະຫານພ້ອມຖືອາວຸດໄດ້ເດີນນຳຫນ້າພວກປະໂລຫິດ, ແລະ ພວກເຂົາໄດເປົ່າແກຂອງພວກເຂົາ, ແຕ່ກອງຣະວັງຫລັງກໍໄດ້ເດີນຕາມຫີບ
ແລະພວກປະໂລຫິດກໍໄດ້ເປົ່າແກຂອງພວກເພິ່ນຢ່າງຕໍ່ເນື່ອງ.
10ແຕ່ໂຢຊວຍໄດ້ສັ່ງປະຊາຊົນກ່າວວ່າ, "ຈົ່ງຢ່າຮ້ອງໂຮ, ຈົ່ງຢ່າໃຫ້ມີສຽງອອກຈາກປາກພວກທ່ານຈົນກວ່າຈະເຖິງວັນທີ່ເຮົາຈະບອກ
ໃຫ້ພວກທ່ານຮ້ອງໂຮ ເມື່ອເຖິງຕອນນັ້ນແລ້ວພວກທ່ານຈຶ່ງຈະຮ້ອງໂຮໄດ້."11ດັ່ງນັ້ນເຂົາໄດ້ເຮັດໃຫ້ຫີບແຫ່ງພຣະຢາເວ,
ຍ່າງອ້ອມເມືອງຫນຶ່ງຮອບ, ໃນມື້ນັ້ນແລ້ວພວກເຂົາກໍພັກຄ້າງຄືນຢູ່ໃນຄ້າຍ.
12ແລ້ວໂຢຊວຍກໍໄດ້ຕື່ນຂຶ້ນແຕ່ເຊົ້າມືດ, ແລະ ພວກປະໂລຫິດໄດ້ຍົກຫີບແຫ່ງພຣະຢາເວຂຶ້ນ.13ພວກປະໂລຫິດເຈັດຄົນ, ຜູ້ທີ່ຖືແກເຂົາແກະ
ເຈັດອັນຢູ່ຫນ້າຫີບແຫ່ງພຣະຢາເວ, ໄດ້ຍ່າງໄປຂ້າງຫນ້າຍ່າງມຸ້ງຫນ້ັນ ແລະ ເປົ່າແກ ເຫລົ່າທະຫານຖືອາວຸດກໍຍ່າງຢູ່ຂ້າງຫນ້າພວກເຂົາ.
ແຕ່ເມື່ອກອງຣະວັງຫລັງໄດ້ຍ່າງຢູ່ຂ້າງຫລັງຫີບແຫ່ງພຣະຢາເວ, ແລ້ວແກທັງຫລາຍກໍໄດ້ຖືກເປົ່າຢ່າງຕໍ່ເນື່ອງ.
14ພວກເຂົາຍ່າງເປັນແຖວອ້ອມເມືອງຫນຶ່ງຮອບໃນມື້ທີ່ສອງ ແລະ ໄດ້ກັບເຂົ້າຄ້າຍພວກເຂົາເຮັດເຊັ່ນນີ້ຢູ່ຫົກມື້.
15ໃນມື້ທີເຈັດ ພວກເຂົາໄດ້ຕື່ນຂຶ້ນແຕ່ເດິກໆ, ແລະ ພວກເຂົາຍ່າງອອ້ມຮອບເມືອງຕາມແບບຂອງພວກເຂົາ ເຊັ່ນເຄີຍໃນເທື່ອນີ້ເປັນເທື່ອທີ ເຈັດ.
16ໃນມື້ນີ້ແຫລະທີ່ພວກເຂົາຍ່າງອ້ອມຮອບເມືອງເປັນມື້ທີເຈັດ, ເມື່ອພວກປະໂລຫິດເປົ່າແກ, ແລ້ວໂຢຊວຍໄດ້ສັ່ງພວກປະຊາຊົນວ່າ,
"ຈົ່ງໂຫ່ຮ້ອງ! ເພາະພຣະຢາເວຊົງມອບເມືອງໃຫ້ພວກທ່ານແລ້ວ.
17ເມືອງ ແລະ ທຸກສິ່ງໃນເມືອງຈະຕ້ອງຖືກທຳລາຍລົງເພື່ອຖວາຍແດ່ພຣະຢາເວ, ມີພຽງຣາຮາບຍິງໂສເພນີເທົ່ານັ້ນທີ່ຈະລອດຊີວິດ - ຄື ນາງ
ແລະ ທຸກຄົນທີ່ຢູ່ໃນບ້ານຂອງນາງເພາະວ່ານາງໄດ້ເຊື່ອງຜູ້ຊາຍທີ່ພວກເຮົາໄດ້ໃຊ້ໄປ.18ແຕ່ສຳລັບພວກທ່ານ,
ຈົ່ງເຝົ້າຣະວັງກ່ຽວກັບການນຳສິ່ງຂອງຕ່າງໆທີ່ຈະຖືກທຳລາຍນັ້ນ, ພວກທ່ານຢ່າໄດ້ນຳສິ່ງໃດອອກມາ. ຖ້າພວກທ່ານເຮັດແບບນັ້ນ,
ພວກທ່ານຈະເຮັດໃຫ້ຄ້າຍຂອງພວກອິສະຣາເອນຈະຕ້ອງຖືກທຳລາຍ ແລະ ພວກທ່ານຈະນຳບັນຫາມາ.19ເຄື່ອງໃຊ້ທັງຫມົດທີ່ເປັນເງິນ,
ທອງຄຳ, ແລະ ສິ່ງຂອງທີ່ເຮັດດ້ວຍທອງສຳລິດ ແລະ ເຫລັກເປັນຂອງຖວາຍແດ່ພຣະຢາເວ. ຂອງພວກນັ້ນຈະຕ້ອງນຳໄປທີ່ຄັງຂອງພຣະຢາເວ."
20ເມື່ອພວກເຂົາເປົ່າແກ, ພວກປະຊາຊົນກໍຮ້ອງຂຶ້ນກຶກກ້ອງ ແລະ ກຳແພງເມືອງກໍເຈື່ອນລົງ ທຸກຄົນກໍບຸກ ແລະ ຢຶດເມືອງ.
21ພວກເຂົາໄດ້ທຳລາຍເມືອງລົງຈົນຫມົດກ້ຽງ ທຸກຢ່າງທີ່ຢູ່ໃນເມືອງ ດ້ວຍຄົມດາບຂອງພວກເຂົາ - ຜູ້ຊາຍແລະ ຜູ້ຍິງ, ຄົນຫນຸ່ມ ແລະ ຄົນເຖົ້າ,
ງົວ, ແກະແລະ ລໍທັງຫລາຍ.
22ແລ້ວໂຢຊວຍໄດ້ກ່າວກັບຜູ້ຊາຍສອງຄົນ ທີ່ໄດ້ເຂົ້າໄປສອດແນມໃນເມືອງວ່າ, "ຈົ່ງໄປຍັງບ້ານໂສເພນີ. ນຳພວກຜູ້ຍິງ ແລະ
ທຸກຄົນທີ່ຢູ່ກັບນາງມາ, ຕາມທີ່ພວກທ່ານໄດ້ສັນຍາໄວ້ກັບນາງ."
23ດັ່ງນັ້ນຊາຍຫນຸ່ມສອງຄົນທີ່ໄດ້ໄປສອດແນມກໍໄດ້ເຂົ້າໄປ ແລະ ນຳຣາຮາບອອກມາ. ພວກເຂົາໄດ້ນຳເອົາພໍ່, ແມ່, ອ້າຍ, ເອື້ອຍນ້ອງ ແລະ
ຍາດພີ່ນ້ອງທຸກໆຄົນໃນຄອບຄົວຂອງນາງອອກມາ. ພວກເຂົາໄດ້ນຳຄົນເຫລົ່ານັ້ນໄປຍັງສະຖານທີ່ນອກຄ້າຍຢູ່ຂອງພວກອິສະຣະເອນ.
24ພວກເຂົາເຜົາເມືອງ ແລະ ທຸກສິ່ງໃນນັ້ນ ພຽງແຕ່ເງິນ, ຄຳ, ແລະ ເຄື່ອງໃຊ້ທີ່ເປັນທອງເຫລືອງ ແລະ ເປັນເຫລັກ
ເທົ່ານັ້ນໄດ້ຖືກນຳໄປໄວ້ທີ່ຄັງໃນພຣະວິຫານຂອງພຣະຢາເວ.
25ແຕ່ໂຢຊວຍໄດ້ປ່ອຍໃຫ້ຣາຮາບຍິງໂສເພນີ, ແລະ ຄອບຄົວພໍ່ຂອງນາງ, ແລະ ທຸກສິ່ງທີ່ເປັນຂອງນາງໄດ້ລອດຊີວິດ.
ນາງໄດ້ໃຊ້ຊີວິດຢູ່ໃນອິສະຣະເອນຈົນເຖິງທຸກວັນນີ້ ເພາະວ່ານາງໄດ້ເຊື່ອງຜູ້ຊາຍທີ່ໂຢຊວຍໄດ້ສົ່ງໄປສອດແນມເຢຣີໂກ.
26ແລ້ວໂຢຊວຍໄດ້ສັ່ງພວກເຂົາໃນເວລານັ້ນດ້ວຍຄຳສາບານ, ແລະ ເຂົາໄດ້ກ່າວວ່າ, "ຂໍໃຫ້ຊາຍໃດກໍຕາມທີ່ໄດ້ສ້າງເມືອງນີ້ຄື,
ເຢຣີໂກຂຶ້ນມາໃຫມ່. ຈະຖືກສາບແຊ່ງຕໍ່ຫນ້າພຣະຢາເວ, ຄົນທີ່ຈະວາງຮາກຖານກໍຂໍໃຫ້ເສຍລູກຊາຍກົກຂອງຕົນ, ແລະ
ຄົນທີ່ຈະສ້າງປະຕູກໍຂໍໃຫ້ເສຍລູກຊາຍຫລ້າຂອງຕົນ."27ດັ່ງນັ້ນພຣະຢາເວກໍໄດ້ສະຖິດກັບໂຢຊວຍ, ແລະ ຊື່ສຽງຂອງເຂົາກໍຊ່າລືໄປທົ່ວແຜ່ນດິນ.

 generated on Tue Jun 17 19:01:42 2025

7 [1]ແຕ່ປະຊາຊົນອິສະຣະເອນໄດ້ກະທຳການ ຢ່າງບໍ່ສັດຊື່ກ່ຽວກັບສິ່ງທີ່ຕ້ອງແຍກອອກມາເພື່ອທຳລາຍນັ້ນ. ອາການລູກຂອງການຫມີ
ຜູ້ເປັນລູກຂອງຊັບດີ, ຜູ້ເປັນລູກຂອງເຊຣາ, ຈາກເຜົ່າຢູດາ, ໄດ້ເອົາສິ່ງທີ່ຕ້ອງແຍກອອກມາເພື່ອທຳລາຍບາງສ່ວນໄປ, ແລະ
ຄວາມໂກດຮ້າຍຂອງພຣະຢາເວ, ຈຶ່ງແຜດເຜົາປະຊາຊົນຂອງຊາວອິສະຣາເອນ.

[2]ໂຢຊວຍໄດ້ສົ່ງຜູ້ຊາຍຈາກເຢຣີໂກໄປເມືອງອາອີ, ຊຶ່ງຢູ່ໃກ້ກັບເບັດອາເວນ, ທາງທິດຕາເວັນອອກຂອງເບັດເອນ.
ເພິ່ນໄດ້ກ່າວກັບເຂົາເຫລົ່ານັ້ນວ່າ, "ຈົ່ງຂຶ້ນໄປ ແລະ ຈົ່ງສອດແນມແຜ່ນດິນ "ດັ່ງນັ້ນພວກເຂົາຈຶ່ງຂຶ້ນໄປ ແລະ ສອດແນມເມືອງອາອີ.
[3]ເມື່ອພວກເຂົາກັບມາຫາໂຢຊວຍ, ພວກເຂົາໄດ້ກ່າວວ່າ. "ຢ່າສົ່ງປະຊາຊົນທັງຫມົດຂຶ້ນໄປເມືອງອາອີ. ໃຫ້ສົ່ງສອງ ຫລື ສາມພັນຄົນຂຶ້ນໄປ
ໂຈມຕີເມືອງອາອີ. ຢ່າໃຫ້ປະຊາຊົນທັງຫມົດລຳບາກໃນການສູ້ຮົບ, ເພາະວ່າພວກນັ້ນມີຈຳນວນນ້ອຍ."
[4]ດັ່ງນັ້ນຈຶ່ງມີປະຊາຊົນປະມານສາມພັນຄົນ ເທົ່ານັ້ນທີ່ຂຶ້ນໄປຈາກກອງທັບ, ແຕ່ຄົນພວກນີ້ກໍຕ້ອງແຕກຖອຍຫນີຈາກຄົນຂອງເມືອງອາອີ.
[5]ຄົນເມືອງອາອີໄດ້ຂ້າພວກເຂົາຕາຍໄປປະມານ ສາມສິບຫົກຄົນ
ໃນຂະນະທີ່ພວກເຂົາໄດ້ຕິດຕາມຊາວອິສະຣະເອນຈາກປະຕູເມືອງໄປຈົນເຖິງເມືອງເຊບາຣິມ, ແລະ ກໍໄດ້ຂ້າພວກເຂົາໃນຂະນະທີ່ພວກເຂົາ
ກຳລັງລົງຕາມເນີນພູເຂົາ. ປະຊາຊົນຈຶ່ງເສຍຂວັນ ແລະ ຢ້ານກົວ.
[6]ແລ້ວໂຢຊວຍກໍຈີກເສື້ອຜ້າຂອງຕົນ. ເຂົາ ແລະ ພວກຜູ້ນຳຂອງອິສະຣາເອນກໍເອົາຂີ້ຝຸ່ນດິນໂຮຍໃສ່ເທິງຫົວຂອງພວກເຂົາ ແລະ
ຫມູບຫນ້າລົງພື້ນດິນທີ່ຫນ້າຫີບຂອງພຣະຢາເວ, ພວກເຂົາຢູ່ແຫ່ງນັ້ນແຕ່ເຊົ້າຈົນຄ່ຳ.
[7]ຈາກນັ້ນໂຢຊວຍກ່າວວ່າ, "ຂ້າແດ່,
ພຣະຢາເວພຣະຜູ້ເປັນເຈົ້າ, ເຫດໃດປະຊາຊົນເຫລົ່ານີ້ຂ້ວາມແມ່ນ້ຳຈໍແດນມາ ທີ່ນີ້? ພຣະອົງຊົງນຳປະຊາຊົນເຫລົ່ານີ້ຂ້ວາມແມ່ນ້ຳຈໍແດນມາ
ເພື່ອມອບພວກຂ້ານ້ອຍໄວ້ໃນມືຂອງພວກອາໂມຣິດ ເພື່ອທຳລາຍພວກຂ້ານ້ອຍເສຍຢ່າງນັ້ນບໍ?
ຖ້າພຽງແຕ່ພວກຂ້ານ້ອຍຕັດສິນໃຈທີ່ແຕກຕ່າງໄປ, ແລະ ພວກຂ້ານ້ອຍຄົງຍັງຢູ່ອີກຝັ່ງຫນຶ່ງຂອງແມ່ນ້ຳຈໍແດນ!
[8]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍກ່າວຫຍັງໄດ້ແດ່ ຫລັງຈາກທີ່ອິສະຣະເອນ ໄດ້ຫັນຫລັງໃຫ້ບັນດາສັດຕຣູຂອງພວກເຂົາ?
[9]ເພາະວ່າພວກການາອານ ແລະ ບັນດາຄົນທີ່ຢູ່ໃນແຜ່ນດິນນັ້ນຈະໄດ້ຍິນເລື່ອງນີ້ ພວກເຂົາຈະລ້ອມພວກຂ້ານ້ອຍ ແລະ
ກະທຳໃຫ້ປະຊາຊົນຂອງແຜ່ນດິນໂລກລືມຊື່ພວກຂ້ານ້ອຍ. ພຣະອົງຈະກະທຳຢ່າງໃດເພື່ອພຣະນາມອັນຍິ່ງໃຫຍ່ຂອງພຣະອົງ?"
[10]ພຣະຢາເວ, ໄດ້ກ່າວກັບໂຢຊວຍວ່າ, "ຈົ່ງລຸກຂຶ້ນເຖີດ! ເປັນຫຍັງເຈົ້າຈຶ່ງຫມູບຫນ້າລົງກັບພື້ນຢ່າງນີ້?
[11]ອິສະຣະເອນໄດ້ເຮັດບາບ.
ພວກເຂົາໄດ້ລະເມີດພັນທະສັນຍາຂອງເຮົາ ຊຶ່ງເຮົາໄດ້ສັ່ງພວກເຂົາໄວ້. ພວກເຂົາໄດ້ລັກບາງສິ່ງທີ່ແຍກໄວ້ ພວກເຂົາໄດ້ລັກເອົາມາ ແລະ
ປິດອຳໄວ້ ໂດຍໄດ້ວາງສິ່ງທີ່ໄດ້ລັກເອົາມາກັບຊັບສິນສ່ວນຕົວຂອງພວກເຂົາ.
[12]ຜົນຈາກເລື່ອງນີ້,
ປະຊາຊົນອິສະຣາເອນຈຶ່ງບໍ່ສາມາດຕໍ່ສູ້ເຫລົ່າສັດຕຣູຂອງພວກເຂົາໄດ້, ພວກເຂົາຫັນຫລັງໃຫ້ພວກສັດຕຣູ
ຂອງພວກເຂົາເພາະວ່າພວກເຂົາເອງໄດ້ກາຍເປັນສິ່ງຖືກແຍກ ເພື່ອການທຳລາຍເສຍເອງ.
ເຮົາຈະບໍ່ຢູ່ກັບພວກເຈົ້າອີກຕໍ່ໄປນອກຈາກພວກເຈົ້າຈະທຳລາຍສິ່ງຕ່າງໆ ທີ່ຄວນຕ້ອງທຳລາຍແຕ່ຍັງຢູ່ກັບພວກເຈົ້າ.
[13]ຈົ່ງລຸກຂຶ້ນ! ຊຳຣະປະຊາຊົນໃຫ້ບໍຣິສຸດ, ແລະ ກ່າວກັບພວກເຂົາວ່າ, 'ຈົ່ງຊຳຣະຕົວພວກເຈົ້າເສຍສຳລັບມື້ອື່ນ. ເພາະພຣະຢາເວພຣະເຈົ້າ,
ຂອງອິສະຣາເອນກ່າວໄວ້ວ່າ, "ໂອອິສະຣາເອນເອີຍ, "ມີສິ່ງທີ່ຕ້ອງແຍກອອກເພື່ອທຳລາຍທີ່ຍັງຢູ່ທ່າມກາງພວກເຈົ້າ,
ເຈົ້າຈຶ່ງສູ້ຮົບເຫລົ່າສັດຕຣູບໍ່ໄດ້ ຈົນກວ່າພວກເຈົ້າຈະນຳສິ່ງຂອງທີ່ແຍກອອກເພື່ອທຳລາຍນັ້ນ ອອກເສຍຈາກຫມູ່ພວກເຈົ້າ."
[14]ໃນຕອນເຊົ້າ,ເຈົ້າຕ້ອງນຳສະເຫນີຕົວເຈົ້າເອງໂດຍເຜົ່າຂອງເຈົ້າ. ເຜົ່າໃດທີ່ພຣະຢາເວຊົງເລືອກໄວ້ ກໍຈະຕ້ອງເຂົ້າມາເທື່ອລະຕະກູນ.
ຕະກູນໃດທີ່ພຣະຢາເວ, ຊົງເລືອກໄວ້ກໍໃຫ້ເຂົ້າມາເທື່ອລະຄົວເຮືອນ. ຄົວເຮືອນໃດທີ່ພຣະຢາເວຊົງຄັດໄວ້ກໍໃຫ້ເຂົ້າມາເທື່ອລະຄົນ.
[15]ສິ່ງນີ້ຈະເກີດຂຶ້ນ ຄົນທີ່ຖືກຈັບຄັດເລືອກໄວ້ ແລະ ຜູ້ທີ່ມີສິ່ງທີ່ຖືກແຍກເພື່ອການທຳລາຍເຫລົ່ານັ້ນ, ເຂົາຈະຖືກເຜົາໄຟ,
ລວມທັງທຸກສິ່ງທີ່ເຂົາມີເພາະວ່າເຂົາໄດ້ລະເມີດພັນທະສັນຍາຂອງພຣະຢາເວ,
ແລະເພາະວ່າເຂົາໄດ້ເຮັດໃນສິ່ງທີ່ຫນ້າອັບອາຍໃນອິສະຣາເອນ."'
[16]ດັ່ງນັ້ນ, ໂຢຊວຍໄດ້ຕື່ນແຕ່ເດິກໆ ແລະ ໄດ້ນຳອິສະຣາເອນເຂົ້າມາໃກ້ເທື່ອລະເຜົ່າ, ແລະເຜົ່າຢູດາໄດ້ຖືກລືອກໄວ້.
[17]ໂຢຊວຍໄດ້ນຳເຜົ່າຢູດາມາໃກ້, ແລະ ຕະກູນເຊຣາກໍໄດ້ຖືກເລືອກ. ເຂົານຳຕະກູນເຊຣາ ມາເທື່ອລະຄົນ, ແລະ ຊັບດີໄດ້ຖືກເລືອກ.
[18]ເຂົາໄດ້ນຳຄົວເຮືອນຊັບດີເຂົ້າມາເທື່ອລະຄົນ, ແລະ ອາການລູກຊາຍຂອງການຫມີຜູ້ເປັນລູກຂອງຊັບດີ, ຜູ້ເປັນລູກຂອງ
ເຊຣາຈາກເຜົ່າຢູດາກໍໄດ້ຖືກເລືອກໄວ້.
[19]ໂຢຊວຍຈຶ່ງກ່າວແກ່ ອາການວ່າ, "ລູກຂອງເຮົາເອີຍ, ຈົ່ງບອກຄວາມຈິງຕໍ່ຫນ້າພຣະຢາເວພຣະເຈົ້າ, ຂອງອິສະຣາເອນ, ແລະ
ສາຣະພາບຜິດບາບຕໍ່ພຣະອົງ. ຈົ່ງບອກເຮົາວ່າທ່ານໄດ້ເຮັດຫຍັງລົງໄປ ຈົ່ງຢ່າປິດບັງເຮົາເລີຍ."
[20]ອາການໄດ້ຕອບໂຢຊວຍວ່າ, "ເປັນຄວາມຈິງ,
ຂ້ານ້ອຍໄດ້ເຮັດບາບຕໍ່ພຣະຢາເວພຣະເຈົ້າ, ຂອງອິສະຣາເອນ. ນີ້ຄືສິ່ງທີ່ຂ້ານ້ອຍໄດ້ເຮັດ:
[21]ຄືເມື່ອຂ້ານ້ອຍໄດ້ເຫັນເສື້ອຄຸມງາມຈາກບາບີໂລນ,
ເງິນຫນັກປະມານສອງຮ້ອຍເຊເຂ, ແລະ ຄຳແທ່ງຫນຶ່ງຫນັກ ຫ້າສິບເຊເຂ, ຂ້ານ້ອຍປຣາຖນາຢາກໄດ້ສິ່ງຂອງເຫລົ່ານັ້ນ ແລະ ເອົາມັນມາ.
ຂອງພວກນັ້ນໄດ້ເຊື່ອງຢູ່ໃນດິນກາງເຕັນຂອງຂ້ານ້ອຍ, ແລະ ເງິນກໍຢູ່ພາຍໃຕ້ມັນນັ້ນ."
[22]ໂຢຊວຍຈຶ່ງສົ່ງຜູ້ສື່ສານໄປ, ຜູ້ທີ່ໄດ້ແລ່ນໄປທີ່ເຕັນ ແລະ ມີຂອງຕ່າງໆຢູ່ທີ່ນັ້ນ. ເມື່ອພວກເຂົາໄດ້ຫລຽວເຫັນ,
ພວກເຂົາກໍພົບວ່າຂອງທີ່ເຊື່ອງໄວ້ໃນເຕັນຂອງເຂົາ, ແລະ ເງິນໄດ້ເຊື່ອງຢູ່ກ້ອງນັ້ນ.
[23]ພວກເຂົາໄດ້ນຳຂອງພວກນັ້ນອອກມາຈາກກາງເຕັນ ແລະ
ນຳມາມອບໃຫ້ໂຢຊວຍ ແລະ ແກ່ປະຊາຊົນອິສະຣາເອນທັງຫມົດ. ແລ້ວເຂົາກໍວາງຂອງເຫລົ່ານັ້ນລົງຕໍ່ຫນ້າພຣະຢາເວ.
[24]ແລ້ວໂຢຊວຍ, ແລະ ຄົນອິສະຣາເອນທີ່ຢູ່ກັບເຂົາທັງຫມົດໄດ້ນຳອາການລູກເຊຣາ, ແລະເງິນ, ເສື້ອຄຸມ, ຄຳແທ່ງ, ບັນດາລູກຊາຍ ແລະ
ລູກສາວຂອງເຂົາ, ຝູງງົວ, ລໍ, ແກະ, ຜ້າເຕັນຂອງເຂົາ, ແລະ ທຸກສິ່ງທີ່ເຂົາມີ, ແລະ ເຂົາທັງຫລາຍໄດ້ນຳສິ່ງຂອງເຫລົ່ານັ້ນໄປຍັງພູເຂົາອາໂຄ.
[25]ແລ້ວໂຢຊວຍກ່າວວ່າ, "ເປັນຫຍັງທ່ານຈຶ່ງນຳຄວາມທຸກຍາກມາໃຫ້ພວກເຮົາ? ພຣະຢາເວຈະຊົງນຳຄວາມທຸກຍາກມາເຖິງທ່ານໃນວັນນີ້."
ພວກອິສະຣາເອນທັງຫມົດກໍເອົາກ້ອນຫີນແກ່ວງໃສ່ເຂົາ ແລ້ວພວກເຂົາເອົາກ້ອນຫີນແກ່ວງໃສ່ພວກທີ່ເຫລືອ ແລະ ຈູດພວກເຂົາດ້ວຍໄຟ.
[26]ພວກເຂົາເອົາກ້ອນຫີນຖົມທັບເຂົາໄວ້ເປັນກອງໃຫຍ່ທີ່ຍັງຢູ່ທີ່ນີ້ຈົນທຸກວັນນີ້. ພຣະຢາເວກໍຊົງຫັນຈາກຄວາມໂກດຮ້າຍຂອງພຣະອົງ,
ດັ່ງນັ້ນສະຖານທີ່ແຫ່ງນີ້ຈຶ່ງຖືກເອີ້ນວ່າຮ່ອມພູອາໂຄມາຈົນເຖິງທຸກວັນນີ້.


generated on Tue Jun 17 19:01:42 2025

8 [1]ໄດ້ກ່າວກັບໂຢຊວຍວ່າ, "ຢ່າຢ້ານ; ຢ່າທໍ້ຖອຍໃຈເລີຍ. ຈົ່ງນຳທະຫານທັງຫມົດໄປກັບເຈົ້າ ລຸກຂຶ້ນໄປຍັງ ເມືອງອາອີ. ເບິ່ງແມ,
ເຮົາໄດ້ມອບກະສັດຂອງເມືອງອາອີ, ໄວ້ໃນມືຂອງເຈົ້າແລ້ວ, ທັງປະຊາຊົນຂອງເຂົາ, ເມືອງຂອງເຂົາ, ແລະແຜ່ນດິນຂອງເຂົາ.
[2]ເຈົ້າຈົ່ງເຮັດກັບເມືອງອາອີ ແລະ ກະສັດຂອງເມືອງນັ້ນເຊັ່ນດຽວກັບທີ່ເຈົ້າໄດ້ເຮັດກັບເມືອງເຢຣິໂກ ແລະ ກະສັດຂອງເມືອງນັ້ນ,
ຍົກເວັ້ນເຈົ້າຈະເອົາເຂົ້າຂອງ ແລະສັດລ້ຽງເປັນຂອງເຈົ້າໄດ້ຈົ່ງຕຽມໂຈມຕີເມືອງທາງດ້ານຫລັງ."

[3]ດັ່ງນັ້ນໂຢຊວຍຈຶ່ງໄດ້ລຸກຂຶ້ນພ້ອມກັບທະຫານ ຂຶ້ນໄປຍັງເມືອງອາອີ. ແລ້ວໂຢຊວຍໄດ້ຄັດເລືອກຜູ້ຊາຍສາມຫມື່ນຄົນ - ເປັນຄົນທີ່ແຂງແຮງ,
ຄົນທີ່ກ້າຫານ - ແລະ ໄດ້ສົ່ງພວກເຂົາອອກໄປໃນເວລາກາງຄືນ.[4]ເຂົາໄດ້ສັ່ງພວກເຂົາວ່າ, "ພວກທ່ານຈົ່ງລີ້ຢູ່ດ້ານຫລັງຂອງເມືອງນັ້ນ,
ຢ່າໄປໄກຈາກເມືອງ, ແຕ່ໃຫ້ທຸກຄົນຕຽມພ້ອມໄວ້.
[5]ສ່ວນຂ້ອຍ ແລະ ພວກຜູ້ຊາຍທັງຫມົດທີ່ຢູ່ກັບຂອ້ຍຈະບຸກເຂົ້າເມືອງ, ແລະ ເມື່ອພວກເຂົາອອກມາຕໍ່ສູ້ກັບພວກເຮົາ,
ເຮົາກໍຈະແລ່ນຖອຍຫນີຈາກພວກເຂົາເຫມືອນກ່ອນຫນ້ານັ້ນ.
[6]ພວກເຂົາຈະຕາມພວກເຮົາອອກມາຈົນກວ່າເຮົາຈະດຶງພວກເຂົາອອກມາຫ່າງຈາກເມືອງ. ພວກເຂົາຈະເວົ້າວ່າ,
'ພວກເຂົາກຳລັງແລ່ນຫນີພວກເຮົາ ຢ່າງທີ່ພວກເຂົາເຮັດເທື່ອກ່ອນນັ້ນ. 'ດັ່ງນັ້ນພວກເຮົາກໍຈະຫນີຈາກພວກເຂົາ.
[7]ແລ້ວໃຫ້ພວກທ່ານຂຶ້ນມາຈາກທີ່ລີ້ ແລະ ທ່ານຈະເຂົ້າຍຶດເມືອງ,
ພຣະຢາເວພຣະເຈົ້າຂອງພວກທ່ານຈະຊົງມອບເມືອງນັ້ນໄວ້ໃນມືຂອງພວກທ່ານ.
[8]ເມື່ອພວກທ່ານເຂົ້າຍຶດເມືອງໄດ້ແລ້ວ, ທ່ານຈະຈູດໄຟເຜົາເມືອງ. ທ່ານຈະຕ້ອງເຮັດຢ່າງນີ້ເມື່ອທ່ານເຊື່ອຟັງຄຳສັ່ງຕາມທີ່ພຣະຢາເວ, ໄດ້ສັ່ງໄວ້,
ນີ້ແຫລະທີ່ຂອ້ຍໄດ້ບອກທ່ານແລ້ວ."[9]ໂຢຊວຍກໍໄດ້ສົ່ງພວກເຂົາໄປ, ແລະ ພວກເຂົາກໍອອກໄປຍັງທີ່ບ່ອນລີ້ໂຈມຕີ, ແລະ
ພວກເຂົາລີ້ຢູ່ລະຫວ່າງເບັດເອນ ກັບເມືອງອາອີທາງທິດຕາເວັນຕົກຂອງເມືອງອາອີ. ແຕ່ໂຢຊວຍໄດ້ນອນຄ້າງຄືນຢູ່ທ່າມກາງປະຊາຊົນ.
[10]ໂຢຊວຍໄດ້ຕື່ນຂຶ້ນຕອນເຊົ້າແຕ່ເດິກໆ ແລະ ໃຫ້ທະຫານຂອງເຂົາຕຽມພ້ອມ, ໂຢຊວຍແລະ ພວກຜູ້ນຳຂອງອິສະຣາເອນ, ແລະ
ພວກເຂົາໄດ້ເຂົ້າໂຈມຕີປະຊາຊົນຂອງເມືອງອາອີ.[11]ທະຫານທັງຫມົດທີ່ຢູ່ກັບເພິ່ນ ໄດ້ມຸ້ງຫນ້າໄປຍັງເມືອງ. ພວກເຂົາໄດ້ເຂົ້າໃກ້ເມືອງ ແລະ
ຕັ້ງຄ້າຍຢູ່ດ້ານທິດເຫນືອຂອງເມືອງອາອີ. ມີຮ່ອມພູຂັ້ນລະຫວ່າງພວກເຂົາກັບເມືອງອາອີ.[12]ເພິ່ນໄດ້ນຳຜູ້ຊາຍປະມານຫ້າພັນຄົນ ແລະ
ໃຫ້ພວກເຂົາລີ້ຢູ່ທາງທິດຕາເວັນຕົກຂອງເມືອງ ລະຫວ່າງເບັດເອນ ແລະ ເມືອງອາອີ.
[13]ພວກເຂົາກໍໄດ້ຈັດກອງກຳລັງທະຫານທັງຫມົດ, ໃຫ້ກອງທັບຫລັກຢູ່ດ້ານເຫນືອຂອງເມືອງ, ແລະ
ພວກທັບຫລັງໃຫ້ຢູ່ດ້ານຕາເວັນອອກຂອງເມືອງ. ໂຢຊວຍໄດ້ຄ້າງຄືນຢູ່ໃນຮ່ອມພູ.[14]ຕໍ່ມາເມື່ອກະສັດແຫ່ງເມືອງອາອີເຫັນດັ່ງນັ້ນ, ເພິ່ນ ແລະ
ກອງທັບຂອງເພິ່ນກໍຕື່ນແຕ່ເຊົ້າ ແລະ ຟ້າວອອກໄປໂຈມຕີອິສະຣາເອນທີ່ສະຖານທີ່ນັ້ນ ຫັນໄປທາງຮ່ອມພູແຫ່ງແມ່ນ້ຳຈໍແດນ.
ເພິ່ນບໍ່ຮູ້ວ່າຈະຖືກຫລອນໂຈມຕີທາງດ້ານຫລັງຂອງເມືອງ.
[15]ໂຢຊວຍ ແລະ ພວກອິສະຣາເອນທັງຫມົດກໍປ່ອຍໃຫ້ພວກເຂົາເອງຕີຖອຍຄືນຕໍ່ຫນ້າພວກເຂົາ, ແລະ ປົບຫນີໄປຍັງຖິ່ນແຫ້ງແລ້ງກັນດານ.
[16]ທຸກຄົນທີ່ຢູ່ໃນເມືອງກໍຖືກລັ້ເພື່ອໃຫ້ໄລ່ຕາມພວກເຂົາໄປ, ແລະ ເມື່ອພວກເຂົາໄລ່ຕາມໂຢຊວຍໄປ ແລະ ພວກເຂົາກໍຖອນອອກໄປຈາກເມືອງ.
[17]ບໍ່ມີຜູ້ຊາຍຈັກຄົນເຫລືອຢູ່ໃນເມືອງອາອີ ແລະ ເບັດເອນ, ຜູ້ທີ່ບໍ່ໄດ້ອອກໄປໄລ່ຕາມອິສະຣາເອນ ພວກເຂົາປະເມືອງແລະ
ປ່ອຍໃຫ້ເມືອງເປີດຢູ່ຂະນະໄລ່ຕາມອິສະຣາເອນໄປ.
[18]ພຣະຢາເວໄດ້ກ່າວກັບໂຢຊວຍວ່າ, "ຈົ່ງເອົາຫອກຂອງເຈົ້າຊີ້ໄປທາງເມືອງອາອີ, ເພາະເຮົາຈະມອບເມືອງອາອີໄວ້ໃນມືຂອງເຈົ້າ."
ໂຢຊວຍກໍໄດ້ຊີ້ຫອກທີ່ຢູ່ໃນມືໄປທາງເມືອງນັ້ນ.[19]ພວກທະຫານທີ່ລີ້ຢູ່ເພື່ອໂຈມຕີກໍອອກໄປຢ່າງວ່ອງໄວຈາກທີ່ຂອງພວກເຂົາ
ເມື່ອໂຢຊວຍໄດ້ເດ່ມືອອກໄປ. ພວກເຂົາໄດ້ແລ່ນ ແລະ ເຂົ້າໄປໃນເມືອງ ແລະ ໄດ້ຍຶດເມືອງໄວ້. ພວກເຂົາໄດ້ຈູດໄຟເຜົາເມືອງທັນທີ.
[20]ພວກຜູ້ຊາຍຊາວເມືອງອາອີ ຫລຽວຄືນຫລັງ. ພວກເຂົາເຫັນຄວັນໄຟຈາກເມືອງພຸ່ງຂຶ້ນສູ່ທ້ອງຟ້າ, ແລະ
ພວກເຂົາບໍ່ສາມາດຫລົບຫນີໄປທາງນັ້ນຫລືທາງນີ້ໄດ້. ເພາະພວກທະຫານອິສະຣາເອນ
ຜູ້ທີ່ໄດ້ຫລົບຫນີໄປຍັງຖິ່ນແຫ້ງແລ້ງກັນດານບັດນີ້ໄດ້ຫັນຫນ້າກັບມາ ພວກເຂົາເຫລົ່ານັ້ນທີ່ໄດ້ໄລ່ຕິດຕາມພວກເຂົາ.
[21]ເມື່ອໂຢຊວຍກັບຄົນອິສະຣາເອນທັງຫມົດ ເຫັນວ່າກອງຊຸ້ມໂຈມຕີຍຶດເມືອງໄດ້ແລ້ວ ແລະ ຄວັນໄຟທີ່ໄຫມ້ເມືອງໄດ້ພຸ່ງຂຶ້ນ.
ພວກເຂົາກໍຫັນກັບມາຂ້າຊາວເມືອງອາອີ.
[22]ທະຫານຄົນອື່ນໆຂອງອິສະຣາເອນ, ພວກຄົນທີ່ໄດ້ເຂົ້າໄປໃນເມືອງກໍໄດ້ອອກມາໂຈມຕີພວກເຂົາ. ດັ່ງນັ້ນພວກຜູ້ຊາຍຂອງເມືອງອາອີ
ຈຶ່ງຢູ່ລະຫວ່າງກາງກອງທັບຂອງອິສະຣາເອນ, ຢູ່ຂ້າງນີ້ ແລະ ຢູ່ຂ້າງນັ້ນ. ອິສະຣາເອນໄດ້ໂຈມຕີຊາວເມືອງອາອີ;
ຈົນບໍ່ມີຈັກຄົນລອດຊີວິດຫລືຫນີໄປໄດ້.[23]ພວກເຂົາໄດ້ຈັບກະສັດແຫ່ງເມືອງອາອີ, ຜູ້ທີ່ຖືກຈັບເປັນ, ແລະ ພວກເຂົາໄດ້ຄຸມຕົວເຂົາມາຫາໂຢຊວຍ.
[24]ເມື່ອອິສະຣາເອນ ໄດ້ຂ້າສັດຕຣູໃນເມືອງອາອີທຸກຄົນໃນຖິ່ນແຫ້ງແລ້ງກັນດານທີ່ພວກເຂົາໄລ່ຕາມໄປນັ້ນ, ແລະ
ເມື່ອຄົນເຫລົ່ານັ້ນທັງຫມົດຈົນເຖິງຄົນສຸດທ້າຍ, ໄດ້ລົ້ມຕາຍດ້ວຍຄົມດາບ. ພວກອິສະຣະເອນກໍໄດ້ກັບມາ ທີ່ເມືອງອາອີ. ແລະ ຂ້າທຸກຄົນຖິ້ມ.
[25]ພວກຄົນເຫລົ່ານັ້ນທີ່ຖືກຂ້າໃນວັນນັ້ນ, ທັງຜູ້ຊາຍ ແລະ ຜູ້ຍິງມີຈຳນວນທັງຫມົດສິບສອງພັນຄົນ, ຄືຊາວເມືອງອາອີ.
[26]ໂຢຊວຍຍັງສືບຕໍ່ຊີ້ຫອກຂອງຕົນໄປສູ່ເມືອງອາອີ ຈົນກວ່າເຂົາຈະໄດ້ທຳລາຍປະຊາຊົນຂອງເມືອງອາອີໃຫ້ພິນາດຫມົດ.
[27]ພວກອິສະຣາເອນພຽງແຕ່ເອົາຝູງສັດລ້ຽງ ແລະ ເຂົ້າຂອງຂອງເມືອງນັ້ນໄປເປັນຂອງພວກເຂົາ, ຕາມທີ່ພຣະຢາເວໄດ້ຊົງສັ່ງໂຢຊວຍໄວ້ນັ້ນ.
[28]ໂຢຊວຍຈຶ່ງເຜົາເມືອງອາອີ ແລະ ເຮັດໃຫ້ເປັນຊາກເພພັງຢູ່ເປັນນິດ. ມັນໄດ້ເປັນສະຖານທີ່ຫວ່າງເປົ່າມາຈົນເຖິງທຸກວັນນີ້.
[29]ເຂົາໄດ້ແຂວນກະສັດແຫ່ງອາອີທີ່ເທິງຕົ້ນໄມ້ໄວ້ຈົນຮອດຄ່ຳ. ເມື່ອຕາເວັນກຳລັງຈະຕົກ
ໂຢຊວຍໄດ້ອອກຄຳສັ່ງໃຫ້ນຳເອົາສົບຂອງກະສັດລົງມາຈາກຕົ້ນໄມ້ ແລະ ໂຍນເຂົ້າໄປທີ່ຫນ້າປະຕູເມືອງ.
ທີ່ນັ້ນພວກເຂົາໄດ້ເອົາຫີນຈຳນວນຫລາຍທັບຖົມໄວ້ເປັນກອງໃຫຍ່ ກອງຫີນນັ້ນຍັງຄົງຢູ່ທີ່ນັ້ນຈົນເຖິງທຸກວັນນີ້.
[30]ແລ້ວໂຢຊວຍໄດ້ສ້າງແທ່ນບູຊາທີ່ພູເຂົາ ເອບານ, ຖວາຍແດ່ພຣະຢາເວພຣະເຈົ້າ, ຂອງອິສະຣາເອນ.[31]ດັ່ງທີ່ໂມເຊຜູ້ຮັບໃຊ້ຂອງພຣະຢາເວ,
ໄດ້ຊົງສັ່ງປະຊາຊົນອິສະຣາເອນ, ຕາມທີ່ໄດ້ຈາຣຶກໄວ້ໃນຫນັງສືກົດບັນຍັດຂອງໂມເຊວ່າ: "ແທ່ນບູຊາຈາກຫີນທີ່ບໍ່ຕັດແຕ່ງ,
ທີ່ບໍ່ມີຜູ້ໃດໄດ້ໃຊ້ເຄື່ອງມືເຫລັກຕົກແຕ່ງເລີຍ." ເຂົາໄດ້ຖວາຍເຄື່ອງເຜົາບູຊາແດ່ພຣະຢາເວ, ແລະ ພວກເຂົາໄດ້ຖວາຍເພື່ອຄວາມສາມັກຄີທັມ.
[32]ໃນທີ່ນັ້ນຕໍ່ຫນ້າປະຊາຊົນຂອງອິສະຣາເອນ, ເຂົາໄດ້ຈາຣຶກສຳເນົາຂອງກົດບັນຍັດຂອງໂມເຊໄວ້ເທິງສີລານັ້ນ.

[33]ອິສະຣາເອນທັງຫມົດ, ພວກຜູ້ນຳ, ພວກເຈົ້າຫນ້າທີ່, ພວກຜູ້ຕັດສິນຂອງພວກເຂົາຢືນສອງຂ້າງຂອງຫີບ ກ່ອນປະໂລຫິດ ແລະ
ຄົນເລວີຜູ້ທີ່ຫາມຫີບພັນທະສັນຍາຂອງພຣະຢາເວ -ພວກຄົນຕ່າງດ້າວເຊັ່ນດຽວກັບພວກທ້ອງຖິ່ນ -
ເຄິ່ງຫນຶ່ງຂອງພວກເຂົາໄດ້ຢືນປີ້ນຫລັງໃສ່ພູເຂົາເກຣິຊິມ ແລະ ອີກເຄິ່ງຫນຶ່ງໄດ້ຢືນປີ້ນຫລັງໃສ່ພູເຂົາເອບານ.
ພວກເຂົາໄດ້ອວຍພອນປະຊາຊົນອິສະຣາເອນ, ຕາມທີ່ໂມເຊຜູ້ຮັບໃຊ້ຂອງພຣະຢາເວ, ໄດ້ຊົງສັ່ງໄວ້ແຕ່ຕົ້ນ.
[34]ຫລັງຈາກນັ້ນໂຢຊວຍໄດ້ອ່ານທຸກຖ້ອຍຄຳໃນກົດບັນຍັດ, ເປັນຄຳອວຍພອນແລະ ຄຳສາບແຊ່ງ,
ຕາມທີ່ຖ້ອຍຄຳເຫລົ່ານັ້ນໄດ້ຈາຣຶກໄວ້ໃນຫນັງສືກົດບັນຍັດ.[35]ບໍ່ມີຈັກຄຳດຽວຈາກທີ່ໂມເຊໄດ້ສັ່ງໄວ້ແລ້ວ
ທີ່ໂຢຊວຍບໍ່ໄດ້ອ່ານຕໍ່ຫນ້າການຊຸມນຸມຂອງອິສະຣາເອນ, ລວມທັງຜູ້ຍິງ, ເດັກນ້ອຍ, ແລະ ຄົນຕ່າງດ້າວທີ່ຢູ່ໃນຫມູ່ພວກເຂົາ.

 generated on Tue Jun 17 19:01:42 2025

9 [1]ຫລັງຈາກນັ້ນບັນດາກະສັດ ທີ່ຢູ່ຫ່າງອອກໄປຈາກແມ່ນ້ຳຈໍແດນ, ແລະ ໃນດິນແດນແຖບເນີນພູ ແລະ ຕາມຕີນພູ
ຕາມແຄມຝັ່ງທະເລໃຫຍ່ຈົນເຖິງເລບານອນ - ຄືຄົນຮິດຕີ, ຄົນອາໂມຣິດ, ຄົນການາອານ, ຄົນເປຣີຊີ, ຄົນຮີວີ, ແລະ ຄົນເຢບຸດ
-[2]ພວກເຂົາເຫລົ່ານີ້ໄດ້ຮ່ວມກັນພາຍໃຕ້ຄຳສັ່ງດຽວທີ່ຈະເຮັດສົງຄາມຕໍ່ສູ້ກັບໂຢຊວຍ ແລະ ອິສະຣາເອນ.

[3]ເມື່ອພວກທີ່ຢູ່ໃນເມືອງກິເບໂອນ ໄດ້ຍິນເຖິງສິ່ງທີ່ໂຢຊວຍໄດ້ກະທຳຕໍ່ເຢຣີໂກ ແລະ ເມືອງອາອີ.[4]ພວກເຂົາຈຶ່ງໄດ້ໃຊ້ກົນອຸບາຍຫນຶ່ງ.
ພວກເຂົາໄດ້ໄປດັ່ງພວກສື່ສານ. ພວກເຂົານຳເອົາຖົງທີ່ຂາດ ແລະ ພາດໃສ່ຫລັງລໍ. ພວກເຂົາໄດ້ເອົາຖົງຫນັງເຫລົ້າອະງຸ່ນເກົ່າທີ່ຈີກ, ຂາດ,
ແລະໄດ້ຕາບຄືນ.[5]ພວກເຂົາໃສ່ເກີບແຕະທີ່ເກົ່າ ແລະ ຂາດ ແລະ ນຸ່ງເສື້ອຜ້າເກົ່າ, ແລະ ຂາດ. ເຂົ້າຈີ່ທີ່ຖືໄປນຳກໍແຫ້ງ ແລະ ຕົກໂຫມະ.
[6]ພວກເຂົາໄດ້ເດີນທາງມາຫາໂຢຊວຍໃນຄ້າຍທີ່ກິນການ ແລະ ໄດ້ກ່າວກັບເພິ່ນ ແລະຜູ້ຊາຍທັງຂອງອິສະຣາເອນວ່າ,
"ພວກເຮົາໄດ້ເດີນທາງມາຈາກດິນແດນທີ່ຢູ່ໄກຫລາຍ, ດັ່ງນັ້ນບັດນີ້ຂໍເຮັດຂໍ້ຕົກລົງກັບເຮົາເຖີດ."[7]ບັນດາຜູ້ຊາຍຂອງອິສະຣາເອນ
ໄດ້ກ່າວກັບຄົນຮີດຕີເຫລົ່ານັ້ນວ່າ, "ບາງທີພວກທ່ານອາດຈະອາໄສຢູ່ໃກ້ພວກເຮົານີ້ແຫລະ
ເຮົາຈະເຮັດຂໍ້ຕົກລົງກັບພວກທ່ານໄດ້ຢ່າງໃດ?"[8]ພວກເຂົາກ່າວກັບໂຢຊວຍວ່າ, "ເຮົາເປັນຄົນຮັບໃຊ້ຂອງທ່ານ" ໂຢຊວຍຖາມພວກເຂົາວ່າ,
"ພວກທ່ານເປັນໃຜ?" ພວກທ່ານມາຈາກໃສ?"
[9]ພວກເຂົາໄດ້ກ່າວກັບເພິ່ນວ່າ, "ຜູ້ຮັບໃຊ້ທັງຫລາຍຂອງພວກທ່ານໄດ້ມາຈາກແຜ່ນດິນທີ່ໄກຫລາຍ, ເພາະພຣະນາມພຣະຢາເວ,
ພຣະເຈົ້າຂອງທ່ານ. ພວກເຮົາໄດ້ຍິນເຖິງເລື່ອງລາວຂອງພຣະອົງ, ແລະ ທຸກເລື່ອງລາວທີ່ພຣະອົງໄດ້ຊົງກະທຳໃນເອຢິບ -[10]ແລະ
ທຸກສິ່ງທີ່ພຣະອົງໄດ້ກະທຳກັບກະສັດສອງຄົນຂອງຊາວອາໂມຣິດ ທີ່ອີກຝາກຫນຶ່ງຂອງຈໍແດນ - ຄືເຈົ້າສີໂຫນກະສັດຂອງເຮັດສະໂບນ, ແລະ
ໂອກກະສັດຂອງບາຊານຜູ້ຢູ່ທີ່ເມືອງອັສະຕາໂຣດ.
[11]ພວກຜູ້ນຳຂອງພວກເຮົາ ແລະ ປະຊາຊົນທັງຫມົດໃນແຜ່ນດິນຂອງພວກເຮົາໄດ້ກ່າວແກ່ເຮົາວ່າ, 'ຈົ່ງເອົາອາຫານສຳລັບເດີນທາງ.
ຈົ່ງໄປຫາພວກເພິ່ນ ແລະ ກ່າວແກ່ພວກເພິ່ນວ່າ, "ພວກເຮົາເປັນຜູ້ຮັບໃຊ້ຂອງທ່ານ.
ຂໍເຮັດຂໍ້ຕົກລົງກັບພວກເຮົາເຖີດ."[12]ນີ້ຄືເຂົ້າຈີ່ຂອງພວກເຮົາ, ມັນຍັງອຸ່ນໆຢູ່ເມື່ອພວກເຮົານຳອອກມາຈາກບ້ານຂອງພວກເຮົາ
ໃນມື້ທີ່ພວກເຮົາອອກເດີນທາງມາຫາພວກທ່ານ. ແຕ່ບັດນີ້, ເບິ່ງເຖີດ, ມັນແຫ້ງແລະ ຕົກໂຫມະແລ້ວ.
[13]ຖົງເຫລົ້າອະງຸ່ນນີ້ຍັງໃຫມ່ເມື່ອເຮົາເຕີມເຫລົ້າອະງຸ່ນ, ແລະ ນຳມາດ້ວຍ, ແລະ ເບິ່ງເຖີດ, ບັດນີ້ມັນກຳລັງຮົ່ວ ເສື້ອຜ້າ ແລະ
ເກີບແຕະຂອງພວກເຮົາກໍຂາດເນື່ອງຈາກການເດີນທາງທີ່ໄກຫລາຍ."'
[14]ດັ່ງນັ້ນພວກອິສະຣາເອນກໍຮັບອາຫານຂອງພວກເຂົາມາ, ແຕ່ພວກເຂົາບໍ່ໄດ້ຂໍຄຳແນະນຳຈາກພຣະຢາເວເພື່ອການຊົງນຳ.
[15]ໂຢຊວຍກໍໄດ້ສ້າງມິດຕະພາບກັບພວກເຂົາ ແລະ ເຮັດຄຳສັນຍາກັບພວກເຂົາ, ໃຫ້ໄວ້ຊີວິດພວກເຂົາ.
ພວກຜູ້ນຳຂອງປະຊາຊົນໄດ້ເຮັດຄຳສາບານກັບພວກເຂົາດ້ວຍ.
[16]ນັບເປັນເວລາສາມວັນຫລັງຈາກທີ່ພວກອິສະຣາເອນໄດ້ເຮັດຂໍ້ຕົກລົງກັບພວກເຂົາ,
ພວກເຂົາທັງຫລາຍກໍໄດ້ຮູ້ວ່າພວກເຂົາເຫລົ່ານັ້ນເປັນເພື່ອນບ້ານຂອງພວກເຂົາ ແລະ ພວກເຂົາອາໄສຢູ່ໃກ້ໆນີ້ເອງ.
[17]ແລ້ວພວກອິສະຣາເອນໄດ້ອອກເດີນທາງໄປເມືອງຕ່າງໆຂອງພວກເຂົາໃນວັນທີສາມ. ເມືອງຂອງພວກເຂົາເຫລົ່ານັ້ນຄືເມືອງກິເບໂອນ, ເກຟີລາ,
ເບເອໂຣດແລະ ກີເລອາດ ເຢອາຣິມ.
[18]ພວກປະຊາຊົນຂອງອິສະຣາເອນ ບໍ່ໄດ້ໂຈມຕີພວກເຂົາເພາະວ່າພວກຜູ້ນຳຂອງເຂົາ ໄດ້ເຮັດສາບານຢ່າງຫນັກແຫນ້ນກັບພວກເຂົາ
ຕໍ່ພຣະຢາເວ, ພຣະເຈົ້າຂອງອິສະຣາເອນແລ້ວ. ພວກອິສະຣາເອນທັງຫມົດກໍຕໍ່ວ່າພວກຜູ້ນຳຂອງເຂົາ.
[19]ແຕ່ພວກຜູ້ນຳທັງຫລາຍໄດ້ກ່າວແກ່ປະຊາຊົນທັງປວງວ່າ, "ເຮົາໄດ້ສາບານກັບພວກເຂົາຕໍ່ຫນ້າພຣະຢາເວ, ພຣະເຈົ້າຂອງອິສະຣາເອນແລ້ວ,
ແລະ ບັດນີ້ເຮົາບໍ່ສາມາດທຳຮ້າຍພວກເຂົາໄດ້.
[20]ນີ້ຄືສິ່ງທີ່ພວກເຮົາຈະກະທຳກັບພວກເຂົາ: ເພື່ອບໍ່ໃຫ້ຄວາມໂກດຮ້າຍໃດໆ ລົງມາເຫນືອເຮົາ
ເພາະຄຳສາບານຊຶ່ງເຮົາໄດ້ສາບານຕໍ່ພວກເຂົານັ້ນ, ເຮົາຈະໄວ້ຊີວິດພວກເຂົາ."[21]ພວກຜູ້ນຳຈຶ່ງໄດ້ກ່າວກັບປະຊາຊົນຂອງພວກເຂົາວ່າ,
"ໃຫ້ພວກເຂົາມີຊີວິດຕໍ່ໄປເທາະ" ດັ່ງນັ້ນພວກກິເບໂອນຈຶ່ງໄດ້ເປັນຄົນຕັດຟືນ ແລະ ຄົນຕັກນ້ຳສຳລັບພວກອິສະຣາເອນທັງຫມົດ,
ຕາມທີ່ພວກຜູ້ນຳໄດ້ກ່າວໄວ້ກ່ຽວກັບພວກເຂົາ.
[22]ໂຢຊວຍຈຶ່ງເອີ້ນພວກເຂົາມາ ແລະ ກ່າວວ່າ, "ເປັນຫຍັງພວກເຈົ້າຈຶ່ງຫລອກລວງພວກເຮົາ ເມື່ອພວກເຈົ້າກ່າວວ່າ,
'ພວກເຮົາຢູ່ຫ່າງໄກຫລາຍຈາກພວກທ່ານ', ໃນເມື່ອພວກເຈົ້າກໍຢູ່ທີ່ນີ້ທ່າມກາງພວກເຮົາ?[23]ບັດນີ້, ເພາະເຫດນີ້ພວກເຈົ້າຈຶ່ງຖືກສາບແຊ່ງ ແລະ
ບາງຄົນໃນພວກເຈົ້າຈະຕົກເປັນທາດໄປຕະຫລອດ, ຄົນເຫລົ່ານັ້ນທີ່ຕັດຟືນ ແລະ ຕັກນ້ຳສຳລັບພຣະວິຫານຂອງພຣະເຈົ້າຂອງເຮົາ."
[24]ພວກເຂົາໄດ້ຕອບໂຢຊວຍ ແລະ ກ່າວວ່າ, "ເພາະເຫດວ່າ ເຮົາຜູ້ຮັບໃຊ້ຂອງພວກທ່ານ ໄດ້ຮັບການບອກເລົ່າວ່າພຣະຢາເວ
ພຣະເຈົ້າຂອງພວກທ່ານໄດ້ຊົງສັ່ງໃຫ້ຜູ້ຮັບໃຊ້ຂອງພຣະອົງຄື ໂມເຊມອບແຜ່ນດິນທັງຫມົດນີ້ແກ່ທ່ານ,
ແລະໃຫ້ທຳລາຍຜູ້ທີ່ອາໄສຢູ່ທັງຫມົດເທິງແຜ່ນດິນຕໍ່ຫນ້າທ່ານ - ດັ່ງນັ້ນພວກເຮົາຈຶ່ງຢ້ານຫລາຍກ່ຽວກັບຊີວິດຂອງພວກເຮົາ.[25]ບັດນີ້, ຈົ່ງເບິ່ງ,
ພວກທ່ານໄດ້ຄວບຄຸມພວກເຮົາໃຫ້ຢູ່ໃນອຳນາດຂອງທ່ານແລ້ວ. ຂໍທ່ານເຮັດຕາມທີ່ທ່ານເຫັນວ່າດີແລະ
ຖືກຕ້ອງສຳລັບທ່ານທີ່ຈະເຮັດກັບພວກເຮົາ, ຈົ່ງກະທຳເຖີດ."
[26]ດັ່ງນັ້ນໂຢຊວຍຈຶ່ງເຮັດເຊັ່ນນີ້ຕໍ່ພວກເຂົາ: ເພິ່ນໄດ້ຍ້າຍພວກເຂົາອອກຈາກການຄວບຄຸມຂອງປະຊາຊົນອິສະຣາເອນ, ແລະ
ພວກອິສະຣາເອນບໍ່ໄດ້ຂ້າພວກເຂົາ.[27]ໃນວັນນັ້ນໂຢຊວຍ ໄດ້ເຮັດໃຫ້ຄົນກິເບໂອນໃຫ້ເປັນຄົນຕັດຟືນ ແລະ ຄົນຕັກນ້ຳສຳລັບຊຸມຊົນ, ແລະ
ສຳລັບແທ່ນບູຊາຂອງພຣະຢາເວ, ຈົນເຖິງທຸກວັນນີ້, ໃນສະຖານທີ່ຊຶ່ງພຣະຢາເວຊົງເລືອກ.


generated on Tue Jun 17 19:01:42 2025

10 [1]ບັດນີ້ເມື່ອອາໂດນີເຊເດັກ, ກະສັດແຫ່ງເຢຣູຊາເລັມ, ຊຶ່ງໄດ້ຍິນວ່າໂຢຊວຍໄດ້ຢຶດເມືອງອາອີ ແລະ ໄດ້ທຳລາຍເມືອງຈົນກ້ຽງແລ້ວ
(ເຊັ່ນດຽວກັບທີ່ເພິ່ນໄດ້ເຮັດກັບເຢຣີໂກ ແລະ ກະສັດຂອງເມືອງນັ້ນ),
ເຂົາໄດ້ຍິນດ້ວຍວ່າປະຊາຊົນຂອງກີເບໂອນໄດ້ເຮັດສັນຍາສັນຕິພາບກັບອິສະຣາເອນ ແລະ ໄດ້ຢູ່ທ່າມກາງພວກເຂົາ.
[2]ປະຊາຊົນຂອງເຢຣູຊາເລັມກໍຮູ້ສຶກຢ້ານກົວຫລາຍ ເພາະວ່າກີເບໂອນເປັນເມືອງໃຫຍ່, ເຫມືອນກັບເມືອງຫລວງທັງຫລາຍ.
ເປັນເມືອງໃຫຍ່ກວ່າເມືອງອາອີ, ແລະ ພວກຜູ້ຊາຍຂອງເມືອງທຸກຄົນກໍເປັນນັກຮົບທີ່ເກັ່ງກ້າດ້ວຍ.

[3]ດັ່ງນັ້ນ ອາໂດນີເຊເດັກ, ກະສັດແຫ່ງເຢຣູຊາເລັມຈຶ່ງໄດ້ສົ່ງສານໄປຫາໂຮຮາມ, ກະສັດແຫ່ງເຮັບໂຣນ, ເຈົ້າປີຣາມກະສັດແຫ່ງຢາຣະມຸດ,
ແລະ ເຈົ້າຢາເຟຍກະສັດແຫ່ງລາກິດ, ແລະ ເຈົ້າເດບີກະສັດແຫ່ງເອກໂລນວ່າ:[4]"ຂໍເຊີນພວກທ່ານມາຫາຂ້າພະເຈົ້າ ແລະ
ຊ່ວຍຂ້າພະເຈົ້າໂຈມຕີ ກີເບໂອນເຖີດ ເພາະວ່າພວກເຂົາໄດ້ເຮັດສັນຍາສັນຕິພາບກັບໂຢຊວຍ ແລະ ກັບປະຊາຊົນອິສະຣາເອນ."
[5]ກະສັດອາໂມຣິດທັງຫ້າຄົນນັ້ນຄືກະສັດແຫ່ງເຢຣູຊາເລັມ, ກະສັດແຫ່ງເຮັບໂຣນ, ກະສັດແຫ່ງຢາຣະມຸດ, ກະສັດແຫ່ງລາກິດ,
ກະສັດແຫ່ງເອກໂລນກໍໄດ້ຂຶ້ນມາ, ພວກເຂົາ ແລະ ກອງທັບທັງຫມົດຂອງພວກເຂົາທັງຫມົດ.
ພວກເຂົາກໍໄດ້ຈັດວາງກຳລັງຂອງຕົນເພື່ອຕໍ່ສູ້ກັບກີເບໂອນ, ແລະພວກເຂົາກໍໄດ້ບຸກໂຈມຕີ.
[6]ຜູ້ຄົນກີເບໂອນໄດ້ສົ່ງສານໄປຫາໂຢຊວຍ ແລະ ກອງທັບທີ່ກິນການ. ພວກເຂົາໄດ້ກ່າວວ່າ, "ໄວເຂົ້າເຖີດ!
ຂໍຢ່າປະມືຂອງພວກທ່ານຜູ້ຮັບໃຊ້ຂອງທ່ານ. ຈົ່ງຂຶ້ນມາຫາພວກເຮົາໂດຍໄວ ແລະຊ່ວຍພວກເຮົາໃຫ້ລອດດ້ວຍເຖີດ,
ຈົ່ງຊ່ວຍພວກເຮົາເພາະກະສັດແຫ່ງອາໂມຣິດໄດ້ຢູ່ໃນດິນແດນເທິງພູເຂົາໄດ້ໂຈມຕີພວກເຮົາ."[7]ໂຢຊວຍໄດ້ຂຶ້ນໄປຈາກກິນການ, ຄືເຂົາ ແລະ
ທະຫານທັງຫມົດ ແລະ ນັກຕໍ່ສູ້ທຸກຄົນໄດ້ໄປກັບເພິ່ນ.
[8]ພຣະຢາເວໄດ້ກ່າວກັບໂຢຊວຍວ່າ, "ຢ່າຢ້ານພວກເຂົາເລີຍ. ເຮົາໄດ້ມອບພວກເຂົາໄວ້ໃນມືເຈົ້າແລ້ວ.
ຈະບໍ່ມີໃຜໃນພວກເຂົາຈະສາມາດຕໍ່ສູ້ເຈົ້າໄດ້."
[9]ໂຢຊວຍໄດ້ເຂົ້າໂຈມຕີພວກນັ້ນທັນທີ, ໄດ້ຍົກທັບເດີນທາງຕະຫລອດທັງຄືນຈາກກິນການ.
[10]ພຣະຢາເວໄດ້ຊົງເຮັດໃຫ້ພວກສັດຕຣູສັບສົນຕໍ່ຫນ້າອິສະຣາເອນ, ແລະ ອິສະຣາເອນໄດ້ຂ້າພວກເຂົາຕາຍຢ່າງຫລວງຫລາຍທີ່ກິນການ ແລະ
ໄດ້ໄລ່ຕິດຕາມຫົນທາງຂຶ້ນໄປທີ່ ເບັດໂຮໂຣນ, ແລະ ພວກເຂົາໄດ້ຂ້າພວກນັ້ນເທິງຫົນທາງທີ່ໄປອາເຊກາ ແລະ ມັກເກດາ.
[11]ຂະນະທີ່ພວກເຂົາແລ່ນຖອຍຫນີຈາກພວກອິສະຣາເອນ, ໄປຕາມທາງເບັດໂຮໂຣນນັ້ນ
ພຣະຢາເວຊົງໂຍນກ້ອນຫີນກ້ອນໃຫຍ່ໆລົງມາຈາກຟ້າເຫນືອພວກເຂົາ ຕະຫລອດເຖິງເມືອງອາເຊກາ, ແລະ ເຂົາທັງຫລາຍກໍຕາຍ.
ຜູ້ທີ່ຕາຍດ້ວຍລູກເຫັບຫີນນັ້ນ ກໍຫລາຍກວ່າຜູ້ທີ່ຕາຍດ້ວຍດາບຂອງຜູ້ຊາຍອິສະຣາເອນ.
[12]ແລ້ວໂຢຊວຍກໍກ່າວຕໍ່ພຣະຢາເວ, ໃນມື້ທີ່ພຣະຢາເວໄດ້ຊົງມອບຊັຍຊະນະໃຫ້ອິສະຣາເອນ ເຫນືອຊາວອາໂມຣິດ.
ນີ້ຄືສິ່ງທີ່ໂຢຊວຍໄດ້ກ່າວຕໍ່ພຣະຢາເວ, ຕໍ່ຫນ້າພວກອິສະຣາເອນວ່າ, "ດວງອາທິດ, ຈົ່ງຢຸດຢູ່ທີ່ເມືອງກີເບໂອນສາ, ແລະ ດວງເດືອນ,
ຈົ່ງຢຸດຢູ່ເທິງຮ່ອມພູໄອຢາໂຣນ."
[13]ດວງອາທິດໄດ້ຢຸດຢູ່, ແລະ ດວງເດືອນກໍບໍ່ໄດ້ເຄືອນຍ້າຍໄປໃສ ຈົນກວ່າຊົນຊາດຈະໄດ້ແກ້ແຄ້ນສັດຕຣູຂອງພວກເຂົາ.
ສິ່ງນີ້ໄດ້ຖືກບັນທຶກໄວ້ໃນຫນັງສືຢາຊາບໍ່ແມ່ນບໍ? ດວງອາທິດຍັງຢຸດຢູ່ກາງທ້ອງຟ້າ; ມັນບໍ່ໄດ້ຕົກໄປປະມານຫນຶ່ງວັນ.
[14]ຈະບໍ່ມີວັນໃດເຫມືອນເຊັ່ນນີ້ ກ່ອນຫລືຫລັງນີ້ອີກແລ້ວທີ່ພຣະຢາເວໄດ້ຊົງຟັງສຽງຂອງມະນຸດ.
ເພາະພຣະຢາເວໄດ້ຕໍ່ສູ້ເພື່ອພວກຂອງອິສະຣາເອນ.
[15]ໂຢຊວຍກັບພວກອິສະຣາເອນທັງຫມົດ ທີ່ຢູ່ກັບເພິ່ນກໍໄດ້ກັບໄປທີ່ຄ້າຍທີ່ກິນການ.
[16]ບັດນີ້ກະສັດທັງຫ້າຄົນນັ້ນໄດ້ຫນີໄປຫລົບລີ້ຢູ່ໃນຖ້ຳມັກເກດາ.[17]ໄດ້ມີລາຍງານໄປເຖິງໂຢຊວຍວ່າ, "ພວກເຂົາໄດ້ພົບກະສັດທັງຫ້າຄົນ!
ພວກເຂົາໄດ້ຫລົບລີ້ຢູ່ໃນຖ້ຳມັກເກດາ!"
[18]ໂຢຊວຍໄດ້ກ່າວວ່າ, "ຈົ່ງກິ້ງກ້ອນຫີນປິດປາກຖ້ຳແລະ ໃຫ້ທະຫານເຝົ້າພວກເຂົາໄວ້.[19]ຈົ່ງຢ່າຖ້າຢູ່. ໃຫ້ຕິດຕາມພວກສັດຕຣູຂອງພວກເຈົ້າ
ແລະ ໂຈມຕີພວກເຂົາຈາກດ້ານຫລັງ. ຈົ່ງຢ່າໃຫ້ພວກເຂົາໄດ້ເຂົ້າມາໃນເມືອງຂອງພວກເຂົາ,
ເພາະວ່າພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ຊົງມອບພວກເຂົາໄວ້ໃນມືຂອງພວກເຈົ້າແລ້ວ."
[20]ໂຢຊວຍ ແລະ ລູກແຫ່ງອິດສະຣາເອນ ໄດ້ເສັດສິ້ນຈາກການຂ້າພວກເຂົາຫລົ່ານັ້ນເປັນຈຳນວນຫລາຍ,
ຈົນພວກເຂົາເກືອບຖືກທຳລາຍຈົນຫມົດກ້ຽງແລ້ວ; ມີແຕ່ພຽງຜູ້ລອດຊີວິດສອງ ສາມຄົນເທົ່ານັ້ນທີ່ໄດ້ຫລົບຫນີໄປຢູ່ໃນເມືອງທີ່ມີກຳແພງລ້ອມ.
[21]ແລ້ວກອງທັບທັງຫມົດກໍກັບມາຫາໂຢຊວຍທີ່ຄ້າຍພັກມັກເກດາ. ບໍ່ມີໃຜກ້າກ່າວຮ້າຍປະຊາຊົນອິສະຣາເອນອີກຕໍ່ໄປ.
[22]ໂຢຊວຍຈຶ່ງກ່າວວ່າ, "ຈົ່ງເປີດປາກຖ້ຳແລະ ນຳກະສັດທັງຫ້າພະອົງອອກມາຫາເຮົາ."[23]ພວກເຂົາກໍເຮັດຕາມທີ່ເພິ່ນໄດ້ບອກ.
ພວກເຂົານຳກະສັດທັງຫ້າພະອົງອອກມາຈາກຖ້ຳພາມາຫາທ່ານ - ມີກະສັດແຫ່ງເຢຣູຊາເລັມ, ກະສັດແຫ່ງເຮັບໂຣນ, ກະສັດແຫ່ງຢາຣະມຸດ,
ກະສັດແຫ່ງລາກິດ, ແລະ ກະສັດແຫ່ງເອກໂລນ.
[24]ເມື່ອພວກເຂົານຳກະສັດເຫລົ່ານັ້ນມາຫາໂຢຊວຍ, ເຂົາຈຶ່ງເອີ້ນໃຫ້ຄົນອິສະຣາເອນທັງຫມົດມາ.
ເຂົາໄດ້ກ່າວກັບຜູ້ບັງຄັບການຂອງທະຫານທີ່ອອກໄປຮ່ວມຮົບກັບທ່ານວ່າ, "ຈົ່ງເອົາຕີນຂອງພວກທ່ານຢຽບທີ່ຄໍຂອງພວກເຂົາ."
ດັ່ງນັ້ນເຂົາກໍຂຶ້ນມາ ແລະ ເອົາຕີນຢຽບຄໍຂອງພວກເຂົາ.[25]ແລ້ວເພິ່ນເວົ້າກັບພວກເຂົາວ່າ "ຢ່າຢ້ານຫລືຕົກໃຈເລີຍ. ຈົ່ງເຂັ້ມແຂງ
ແລະກ້າຫານເຖີດ. ນີ້ຄືສິ່ງທີ່ພຣະຢາເວຈະເຮັດກັບພວກສັດຕຣູຂອງພວກເຈົ້າທຸກຄົນທີ່ພວກເຈົ້າກຳລັງຈະຕໍ່ສູ້ດ້ວຍ."
[26]ແລ້ວໂຢຊວຍໄດ້ລົງມື ແລະ ໄດ້ຂ້າພວກກະສັດ. ເພິ່ນໄດ້ແຂວນພວກເຂົາໄວ້ເທິງຕົ້ນໄມ້ຫ້າຕົ້ນຈົນຮອດຄ່ຳ.[27]ເມື່ອຕາເວັນຕົກດິນ,
ໂຢຊວຍໄດ້ມີຄຳສັ່ງ ແລະ ພວກເຂົາໄດ້ນຳເອົາສົບກະສັດເຫລົ່ານັ້ນລົງມາຈາກຕົ້ນໄມ້, ແລະ
ກໍໄດ້ໂຍນເຂົ້າໄປໃນຖ້ຳທີ່ພວກເຂົາເຄີຍຫລົບລີ້ຢູ່ກ່ອນນັ້ນແລ້ວປາກຖ້ຳກໍຖືກປິດດວ້ຍຫີນກ້ອນໃຫຍ່
ກ້ອນຫີນເຫລົ່ານັ້ນຍັງຢູ່ທີ່ນັ້ນຈົນເຖິງທຸກວັນນີ້.


generated on Tue Jun 17 19:01:42 2025

28ໂດຍວິທີນີ້, ໂຢຊວຍກໍຢຶດເມືອງມັກເກດາໄດ້ວັນນັ້ນ ແລະ ໄດ້ຂ້າທຸກຄົນທີ່ນັ້ນດ້ວຍດາບ, ລວມທັງກະສັດຂອງເມືອງນັ້ນ.
ເພິ່ນໄດ້ທຳລາຍພວກເຂົາ ແລະ ສິ່ງມີຊີວິດທຸກຢ່າງທີ່ນັ້ນຈົນຫມົດກ້ຽງ. ເຂົາບໍ່ໃຫ້ເຫລືອຜູ້ລອດຊີວິດ.
ເຂົາໄດ້ກະທຳຕໍ່ກະສັດແຫ່ງມັກເກດາເຊັ່ນດຽວກັບທີ່ເພິ່ນໄດ້ເຮັດກັບກະສັດເຢຣິໂກ.
29ໂຢຊວຍ ແລະ ອິສະຣາເອນທັງຫມົດກໍໄດ້ອອກຈາກມັກເກດາມາເຖິງເມືອງລິບນາ. ເຂົາໄດ້ໄປສູ້ຮົບກັບລິບນາ.
30ພຣະຢາເວຍັງໄດ້ມອບເມືອງນີ້ໄວ້ໃນມືຂອງອິສະຣາເອນ - ເຊັ່ນດຽວກັບກະສັດຂອງພວກເຂົາ.
ໂຢຊວຍໄດ້ລົງມືໂຈມຕີທຸກສິ່ງທີ່ມີຊີວິດດ້ວຍດາບ. ເພິ່ນບໍ່ໄດ້ປ່ອຍໃຫ້ໃຜລອດຊີວິດ.
ເພິ່ນໄດ້ເຮັດກັບກະສັດຂອງເມືອງນີ້ເຊັ່ນດຽວກັບທີ່ເພິ່ນໄດ້ເຮັດກັບກະສັດແຫ່ງເຢຣິໂກ.
31ແລ້ວໂຢຊວຍ ແລະ ພວກອິສະຣາເອນທັງຫມົດກໍອອກຈາກເມືອງລິບນາມາເຖິງເມືອງລາກິດ. ເຂົາຕັ້ງຄ້າຍໃກ້ເມືອງ ແລະ ກໍເຂົ້າໂຈມຕີ.
32ພຣະຢາເວໄດ້ປຣະທານລາກິດໃຫ້ຢູ່ໃນມືຂອງອິສະຣາເອນ. ໂຢຊວຍກໍໄດ້ຢຶດເມືອງໃນວັນທີສອງ.
ເພິ່ນໄດ້ລົງມືກັບທຸກສິ່ງໃນເມືອງນັ້ນດ້ວຍດາບ, ເຊັ່ນດຽວກັບທີ່ເພິ່ນໄດ້ເຮັດກັບລິບນາ.
33ແລ້ວໂຮຣາມ, ກະສັດແຫ່ງເກເຊ, ໄດ້ຂຶ້ນມາຊ່ວຍເມືອງລາກິດ. ໂຢຊວຍກໍໄດ້ໂຈມຕີເຂົາ ແລະ
ກອງທັບຂອງເຂົາຈົນວ່າບໍ່ເຫລືອຜູ້ລອດຊີວິດເລີຍ.
34ແລ້ວໂຢຊວຍພ້ອມກັບພວກອິສະຣາເອນທັງຫມົດກໍອອກຈາກເມືອງລາກິດມາເຖິງເມືອງເອກໂລນ. ພວກເຂົາໄດ້ຕັ້ງຄ້າຍໃກ້ເມືອງແລະ
ເຂົ້າໂຈມຕີເມືອງນັ້ນ, 35ແລະ ໄດ້ຢຶດເມືອງໃນວັນດຽວກັນ. ພວກເຂົາໄດ້ແທງດ້ວຍດາບ ແລະ ພວກເຂົາໄດ້ທຳລາຍທຸກຄົນທີ່ຢູ່ໃນເມືອງນັ້ນ,
ຢ່າງດຽວທີ່ໂຢຊວຍໄດ້ເຮັດຕໍ່ເມືອງລາກິດ.
36ແລ້ວໂຢຊວຍພ້ອມກັບພວກອິສະຣາເອນທັງຫມົດກໍຂຶ້ນໄປຈາກເມືອງເອກໂລນມາເຖິງເມືອງເຮັບໂຣນ. ພວກເຂົາກໍໄດ້ເຂົ້າລ້ອມ ແລະ
ເຂົ້າໂຈມຕີເມືອງນັ້ນ. 37ພວກເຂົາກໍຢຶດເມືອງນັ້ນແລ້ວ ກໍໄດ້ຂ້າກະສັດ ແລະ ຫມູ່ບ້ານໂດຍຮອບ.
ພວກເຂົາທຳລາຍທຸກສິ່ງທຸກຢ່າງທີ່ມີຊີວິດໃນເມືອງນັ້ນຢ່າງຮາບຄາບ, ບໍ່ໃຫ້ເຫລືອຜູ້ໃດລອດຊີວິດ,
ເຊັ່ນດຽວກັບທີ່ໂຢຊວຍໄດ້ເຮັດກັບເມືອງເອກໂລນ. ເພິ່ນໄດ້ທຳລາຍເມືອງນັ້ນແລະ ສິ່ງທີ່ມີຊີວິດທຸກຢ່າງໃນເມືອງນັ້ນ.
38ແລ້ວໂຢຊວຍກໍໄດ້ກັບ, ແລະ ກອງທັບອິສະຣາເອນທັງຫມົດທີ່ຢູ່ກັບເພິ່ນ, ແລະ ພວກເຂົາກໍກັບມາຍັງເມືອງເດບີ ແລະ ເຂົ້າໂຈມຕີເມືອງນັ້ນ.
39ທ່ານກໍໄດ້ຢຶດເມືອງລວມທັງກະສັດ, ແລະ ຫມູ່ບ້ານໂດຍຮອບທັງຫມົດ. ພວກເຂົາກໍໄດ້ລົງມືຂ້າພວກເຂົາດ້ວຍດາບ ແລະ
ກໍໄດ້ທຳລາຍທຸກສິ່ງທີ່ຢູ່ໃນເມືອງນັ້ນຢ່າງລາບຄາບ. ໂຢຊວຍບໍ່ໄດ້ໃຫ້ຜູ້ໃດລອດຊີວິດ, ທ່ານໄດ້ເຮັດຕໍ່ເມືອງເຮັບໂຣນ ແລະ
ກະສັດຂອງເມືອງນັ້ນຢ່າງໃດທ່ານກໍເຮັດກັບເມືອງລິບນາ ແລະ ກະສັດຂອງເມືອງນັ້ນຢ່າງນັ້ນ.
40ໂຢຊວຍໄດ້ຊົນຊະນະທຸກເມືອງເທິງດິນແດນ, ຮ່ອມພູເນເກບ, ຕາມຕີນພູ, ແລະ ຕາມເນີນພູ.
ກະສັດທັງຫມົດຂອງເມືອງເຫລົ່ານັ້ນບໍ່ມີຜູ້ໃດລອດຊີວິດ. ເພິ່ນໄດ້ທຳລາຍທຸກສິ່ງທີ່ມີຊີວິດດັ່ງທີ່ພຣະຢາເວພຣະເຈົ້າ, ຂອງອິສະຣາເອນ
ໄດ້ຊົງສັ່ງໄວ້. 41ໂຢຊວຍໄດ້ໂຈມຕີພວກເຂົາດ້ວຍດາບຕັ້ງແຕ່ຄາເດັດບາເນຍເຖິງກາຊາ, ແລະທັງແຜ່ນດິນໂກເຊນຈົນເຖິງເມືອງກິເບໂອນ.
42ໂຢຊວຍໄດ້ຈັບພວກກະສັດເຫລົ່ານີ້ ແລະເມືອງຂອງພວກເຂົາໄດ້ໃນບັ້ນຮົບດຽວເພາະພຣະຢາເວ,
ພຣະເຈົ້າຂອງອິສະຣາເອນໄດ້ຊົງສູ້ຮົບເພື່ອອິສະຣາເອນ. 43ແລ້ວໂຢຊວຍ, ພ້ອມກັບຊາວອິສະຣາເອນທັງຫມົດກໍໄດ້ກັບໄປຍັງຄ້າຍທີ່ກິນການ.

 generated on Tue Jun 17 19:01:42 2025

# 11

1ເມື່ອຢາບິນ, ກະສັດແຫ່ງຮາໂຊ, ໄດ້ຍິນຂ່າວນີ້ເຂົາຈຶ່ງໄດ້ສົ່ງສານໄປຫາໂຢບັບ, ກະສັດແຫ່ງມາໂດນ, ໄປຫາກະສັດແຫ່ງຊິມໂລນ,
ແລະໄປຫາກະສັດແຫ່ງອັກຊັບ. 2ເຂົາໄດ້ສົ່ງສານໃຫ້ບັນດາກະສັດຊຶ່ງຢູ່ໃນດິນແດນເນີນພູຕອນເໜືອ,
ໃນຮ່ອມພູແມ່ນ້ຳຈໍແດນທາງຕອນໃຕ້ຂອງຄາລິເລ, ແລະ ໃນດິນແດນພູເຂົາໂດເຣທາງທິດຕາເວັນຕົກ.
3ເຂົາໄດ້ສົ່ງສານໄປຫາພວກການາອານທາງທິດຕາເວັນອອກ ແລະ ທິດຕາເວັນຕົກດ້ວຍ, ພວກອາໂມຣິດພວກຮິດຕີ, ພວກເປຣີຊີ, ແລະ
ພວກເຢບຸດໃນດິນແດນເນີນພູ, ແລະ ພວກຮີວີທາງຕີນພູເຮີໂມນໃນແຜ່ນດິນມິຊະປາ.

4ດ້ວຍຈຳນວນທະຫານທີ່ຫລວງຫລາຍດັ່ງເມັດຊາຍຕາມແຄມຝັ່ງທະເລ, ພວກເຂົາມີມ້າ ແລະ ຣົດຮົບຈຳນວນຫລວງຫລາຍ.
5ກະສັດທັງຫມົດນີ້ກໍໄດ້ພົບກັນໃນເວລາທີ່ໄດ້ນັດຫມາຍໄວ້, ແລະ ກໍໄດ້ມາຕັ້ງຄ້າຍຢູ່ໂຮມກັນທີ່ຫ້ວຍນ້ຳເມໂຣມເພື່ອຕໍ່ສູ້ກັບອິສະຣາເອນ.
6ພຣະຢາເວໄດ້ກ່າວກັບໂຢຊວຍວ່າ, "ຈົ່ງຢ່າຢ້ານພວກເຂົາ, ເພາະວ່າມື້ອື່ນໃນເວລາດຽວກັນນີ້
ເຮົາຈະມອບພວກເຂົາທັງຫມົດແກ່ອິສະຣາເອນຢ່າງຄົນຕາຍແລ້ວ. ໃຫ້ເຈົ້າຕັດເອັນຄະນ່ອງມ້າຂອງພວກເຂົາ, ແລະ
ເຜົາລົດມ້າຂອງພວກເຂົາເສຍ." 7ໂຢຊວຍ ແລະ ທະຫານຂອງເຂົາທັງຫມົດ. ພວກເຂົາກໍມາເຖິງທີ່ຫ້ວຍນ້ຳເມໂຣມທັນທີ, ແລະ
ກໍໄດ້ເຂົ້າໂຈມຕີພວກສັດຕຣູ.
8ພຣະຢາເວໄດ້ໃຫ້ພວກສັດຕຣູຕົກຢູ່ໃນມືຂອງອິສະຣາເອນ, ແລະ ພວກເຂົາແທງພວກສັດຕຣູດ້ວຍດາບ ແລະ
ໄດ້ໄລ່ຕິດຕາມພວກເຂົາໄປເຖິງຊີໂດນ, ເຖິງເມືອງມີສະເຣໂຟດມາອິມ, ແລະ ເຖິງຮ່ອມພູມິຊະປາດ້ານຕາເວັນອອກ.
ພວກເຂົາໄດ້ຂ້າພວກສັດຕຣູຈົນກວ່າບໍ່ເຫລືອໄວ້ແມ່ນແຕ່ຄົນດຽວ. 9ໂຢຊວຍໄດ້ເຮັດຕໍ່ພວກເຂົາຕາມທີ່ພຣະຢາເວໄດ້ສັ່ງເຂົາ.
ເຂົາໄດ້ຕັດເອັນຄະນ່ອງມ້າ ແລະ ເຜົາຣົດຮົບທັງຫມົດ.
10ໂຢຊວຍກໍໄດ້ກັບມາໃນເວລານັ້ນ ແລະໄດ້ຍຶດເມືອງຮາໂຊ. ພວກເຂົາກໍໄດ້ຂ້າກະສັດຂອງເມືອງນັ້ນດ້ວຍດາບ.
(ຮາໂຊໄດ້ເຄີຍເປັນຫົວຫນ້າຂອງອານາຈັກເຫລົ່ານີ້ທັງຫມົດ.) 11ພວກເຂົາໄດ້ໃຊ້ດາບຂ້າສິ່ງທີ່ມີຊີວິດທຸກຢ່າງທີ່ຢູ່ທີ່ນັ້ນ, ແລະ
ເພິ່ນກໍໄດ້ແຍກພວກເຂົາອອກມາເພື່ອທຳລາຍເສຍ, ດັ່ງນັ້ນຈຶ່ງບໍ່ມີສິ່ງມີຊີວິດລອດເຫລືອແລ້ວ ເພິ່ນກໍເຜົາເມືອງຮາໂຊ.
12ໂຢຊວຍໄດ້ຢຶດທຸກເມືອງຂອງກະສັດເຫລົ່ານີ້. ເພິ່ນໄດ້ຈັບກະສັດທັງຫມົດຂອງພວກເຂົາ ແລະ ຂ້າພວກເຂົາດ້ວຍດາບ.
ເພິ່ນໄດ້ທຳລາຍພວກເຂົາທຸກໆຄົນດັ່ງທີ່ໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ສັ່ງໄວ້. 13ອິສະຣາເອນບໍ່ໄດ້ເຜົາເມືອງໃດໆທີ່ໄດ້ສ້າງຕາມໂຄກເນີນ,
ຍົກເວັ້ນຮາໂຊເມືອງນີ້ເທົ່ານັ້ນທີ່ໂຢຊວຍໄດ້ເຜົາ.
14ກອງທັບຂອງອິສະຣາເອນໄດ້ນຳຊັບສິນທັງຫມົດຈາກເມືອງເຫລົ່ານີ້ພ້ອມທັງຝູງສັດລ້ຽງມາເປັນຂອງພວກເຂົາເອງ.
ພວກເຂົາໄດ້ຂ້າທຸກຄົນດ້ວຍດາບ ພວກເຂົາບໍ່ໃຫ້ເຫລືອສິ່ງມີຊີວິດໄວ້ເລີຍ. 15ເຊັ່ນດຽວກັນກັບພຣະຢາເວໄດ້ຊົງສັ່ງໂມເຊ,
ຜູ້ຮັບໃຊຂອງພຣະອົງໄວ້ຢ່າງໃດ, ໂມເຊກໍໄດ້ສັ່ງໂຢຊວຍໄວ້ຢ່າງນັ້ນ ແລະ ໂຢຊວຍກໍໄດ້ເຮັດຕາມ
ເພິ່ນໄດ້ເຮັດທຸກສິ່ງທີ່ພຣະຢາເວໄດ້ສັ່ງໄວ້ກັບໂມເຊ.
16ຄືດິນແດນເນີນພູ, ເນເກບທັງຫມົດ ແຜ່ນດິນແຫ່ງໂກເຊນທັງຫມົດ, ທີ່ບັນດາຕີນພູ, ຮ່ອມພູແຫ່ງແມ່ນ້ຳຈໍແດນ,
ດິນແດນເນີນພູຂອງອິສະຣາເອນ, ແລະ ດິນແດນທີ່ຮາບພຽງ. 17ຈາກພູເຂົາຮາລັກໃກ້ກັບເອໂດມ, ແລະ ໄປທາງເໜືອເຖິງບາອານກາດ
ໃນຮ່ອມພູເລບານອນ ຕີນພູເຂົາເຮີໂມນ, ເພິ່ນໄດ້ຈັບກະສັດທັງຫມົດຂອງພວກເຂົາ ແລະ ຂ້າເສຍ.
18ໂຢຊວຍໄດ້ເຮັດສົງຄາມຢູ່ເປັນເວລານານ ກັບກະສັດທັງຫມົດນີ້. 19ບໍ່ມີຈັກເມືອງທີ່ໄດ້ເຮັດສັນຍາສັນຕິພາບກັບກອງທັບອິສະຣາເອນ
ນອກຈາກຄົນຮີວີຊຶ່ງໄດ້ອາໄສທີ່ ກິເບໂອນ. ອິສະຣາເອນໄດ້ຍຶດເມືອງທີ່ເຫລືອທັງຫມົດດ້ວຍການສູ້ຮົບ. 20ເພາະວ່າພຣະຢາເວ,
ຜູ້ຊົງເຮັດໃຫ້ຈິດໃຈຂອງພວກເຂົາມີໃຈແຂງ ດັ່ງນັ້ນພວກເຂົາຕ້ອງເຮັດສົງຄາມກັບພວກອິສະຣາເອນ,
ເພື່ອວ່າພວກເຂົາຈະໄດ້ຖືກທຳລາຍຢ່າງຫມົດກ້ຽງໂດຍປາສະຈາກຄວາມເມດຕາ, ດັ່ງທີ່ພຣະອົງ, ໄດ້ຊົງສັ່ງໂມເຊໄວ້.
21ແລ້ວໂຢຊວຍກໍໄດ້ມາໃນເວລານັ້ນ ແລະເພິ່ນໄດ້ທຳລາຍຄົນອານາກິມ. ເພິ່ນໄດ້ເຮັດສິ່ງນີ້ໃນດິນແດນເນີນພູທີ່ເຮັບໂຣນ, ເດບີອານາບ, ແລະ
ໃນດິນແດນເນີນພູທຸກແຫ່ງຂອງຢູດາ, ແລະເນີນພູຂອງອິສະຣາເອນ. ໂຢຊວຍໄດ້ທຳລາຍພວກເຂົາ ແລະ ເມືອງຂອງພວກເຂົາຈົນກ້ຽງ.
22ບໍ່ມີຄົນອານາກິມເຫລືອໃນແຜ່ນດິນອິສະຣາເອນຍົກເວັ້ນທີ່ກາຊາ, ກາດ, ແລະ ອາສະໂດດ.
23ດັ່ງນັ້ນໂຢຊວຍໄດ້ຢຶດຄອງດິນແດນທັງຫມົດ, ຕາມທີ່ພຣະຢາເວໄດ້ສັ່ງໄວ້ກັບໂມເຊທຸກປະການ. ໂຢຊວຍກໍໄດ້ມອບໄວ້ໃຫ້ເປັນມໍຣະດົກ
ແກ່ອິສະຣາເອນຕາມທີ່ໄດ້ແບ່ງໃຫ້ແຕ່ລະເຜົ່າ ແລ້ວແຜ່ນດິນກໍສະຫງົບຈາກສົງຄາມ.


generated on Tue Jun 17 19:01:42 2025

12 [1]ຕໍ່ໄປນີ້ຄືບັນດາກະສັດຂອງດິນແດນ, ຊຶ່ງຜູ້ຊາຍອິສະຣາເອນໄດ້ຍຶດຄອງແຜ່ນດິນ. ພາກຕາເວັນອອກຂອງແມ່ນ້ຳຈໍແດນ ແລະ
ເລີຍໄປທາງພາກເຫນືອ. ຈາກຮ່ອມພູລຸ່ມແມ່ນອາກໂນນເຖິງພູເຂົາເຮີໂມນ ແລະ ທັງຫມົດຂອງອາຣາບານເຖິງພາກຕາເວັນອອກ.
[2]ເຈົ້າສີໂຫນ, ກະສັດຂອງຄົນອາໂມຣິດ, ຢູ່ທີ່ເຮັດຊະໂບນ. ເຂົາໄດ້ປົກຄອງນັບຈາກອາໂຣອີ, ຊຶ່ງຢູ່ຕາມແຄມຮ່ອມພູອາກໂນນ, ຈາກກາງຮ່ອມພູ
ແລະ ເຄິ່ງຫນຶ່ງຂອງກີເລອາດລົງໄປເຖິງແມ່ນ້ຳຢັບໂບກຕິດຊາຍແດນຂອງຄົນອຳໂມນ.

[3]ເຈົ້າສີໂຫນໄດ້ປົກຄອງອາຣາບາໄປຈົນເຖິງທະເລກິນເນເຣ, ເຖິງທິດຕາເວັນອອກ, ເຖິງທະເລຂອງອາຣາບາ (ທະເລເກືອ) ເຖິງທິດຕາເວັນອອກ,
ມາຈົນເຖິງເບັດເຢຊີໂມດ ແລະ ໄປເຖິງຕອນໃຕ້, ໄປຈົນເຖິງຕີນພູຂອງພູເຂົາປີສະກາ.[4]ເຈົ້າໂອກ, ກະສັດແຫ່ງບາຊານ,
ຊຶ່ງເປັນຄົນເຜົ່າເຣຟາອິມທີ່ເຫລືອຢູ່. ຜູ້ຢູ່ທີ່ອັດຊະຕາໂຣດ ແລະເອັດເຣອີ.[5]ເຂົາໄດ້ປົກຄອງເຫນືອພູເຂົາເຮີໂມນ, ສາເລກາ, ແລະ
ບາຊານທັງຫມົດ, ເຖິງຊາຍແດນຂອງປະຊາຊົນເກຊູ ແລະ ຄົນມາອາກາ, ແລະ ເຄິ່ງຫນຶ່ງຂອງກີເລອາດ, ເຖິງເຂດແດນຂອງເຈົ້າສີໂຫນ,
ກະສັດແຫ່ງເຮັດຊະໂບນ.
[6]ໂມເຊຜູ້ຮັບໃຊ້ຜູ້ຮັບໃຊ້ຂອງພຣະຢາເວ, ແລະ ປະຊາຊົນຂອງອິສະຣາເອນໄດ້ເຮັດໃຫ້ພວກເຂົາພ່າຍແພ້ ແລະ ໂມເຊຜູ້ຮັບໃຊ້ຂອງພຣະຢາເວ,
ໄດ້ມອບແຜ່ນດິນໃຫ້ເປັນກຳມະສິດຂອງຄົນຣູເບັນ, ຄົນກາດ, ແລະ ເຄິ່ງຫນຶ່ງຂອງຄົນເຜົ່າມານາເຊ.
[7]ເຫລົ່ານີ້ຄືບັນດາກະສັດຂອງດິນແດນຊຶ່ງໂຢຊວຍກັບປະຊາຊົນອິສະຣາເອນໄດ້ຕີເອົາຊະນະທາງທິດຕາເວັນຕົກຂອງແມ່ນ້ຳຈໍແດນ,
ຕັ້ງແຕ່ບາອັນກາດໃນຮ່ອມພູໃກ້ກັບເລບານອນ ເຖິງພູເຂົາຮາລັກໃກ້ກັບເອໂດມ. ໂຢຊວຍໄດ້ມອບແຜ່ນດິນໃຫ້ເປັນກຳມະສິດ
ແກ່ຄົນເຜົ່າຕ່າງໆຂອງອິສະຣາເອນ.[8]ເພິ່ນໄດ້ມອບແດນເນີນພູທີ່ໃຕ້ອາຣາບາຂ້າງໆບັນດາເນີນພູໃນຖິ່ນແຫ້ງແລ້ງກັນດານ ແລະ
ທີ່ເນເກບແຜ່ນດິນຂອງຄົນຮິດຕີ, ຄົນອາໂມຣິດ, ຄົນການາອານ, ຄົນເປຣິຊີ, ຄົນຮີວີ, ແລະ ຄົນເຢບຸດ.
[9]ເຫລົ່າກະສັດທັງຫລາຍຊຶ່ງລວມທັງກະສັດຂອງເຢຣີໂກ ກະສັດຂອງອາອີຊຶ່ງຢູ່ໃກ້ໆເບັດເອັນ.[10]ກະສັດຂອງເຢຣູຊາເລັມ, ກະສັດຂອງເອນາຢິມ.
[11]ກະສັດຂອງຢາຣະມຸດ, ກະສັດຂອງລາກິດ.[12]ກະສັດຂອງເອກໂຣນ, ກະສັດຂອງເກເຊ.
[13]ກະສັດຂອງເດບີ, ກະສັດຂອງເກເດ,[14]ກະສັດຂອງໂຮມາ, ກະສັດຂອງອາຣາດ,[15]ກະສັດຂອງລິບນາ, ກະສັດຂອງອາດຸນລຳ,
[16]ກະສັດຂອງມັກເກດາ, ກະສັດຂອງເບັດເອນ,
[17]ກະສັດຂອງຕັບປູອາ, ກະສັດຂອງເຮເຟ,[18]ກະສັດຂອງອາເຟັກ, ກະສັດຂອງລາຊາໂຣນ,[19]ກະສັດຂອງມາໂດນ, ກະສັດຂອງຮາໂຊ,
[20]ກະສັດຂອງຊິມໂຣນເມໂຣນ, ກະສັດຂອງອັກຊັບ,
[21]ກະສັດຂອງຕາອານັກ, ກະສັດຂອງເມກິດໂດ,[22]ກະສັດຂອງເກເດັດ, ກະສັດຂອງໂຢກເນອາມໃນກາເມນ,[23]ກະສັດຂອງໂດເຣ,
ໃນນາຟາດໂດເຣ, ກະສັດຂອງໂກຍິມໃນກິນການ.[24]ກະສັດຂອງຕີຣະຊາ. ລວມຈຳນວນກະສັດທັງຫມົດຄືສາມສິບເອັດພະອົງ.


generated on Tue Jun 17 19:01:42 2025

13 [1]ບັດນີ້ໂຢຊວຍໄດ້ເຖົ້າແກ່ຫລາຍແລ້ວ ເມື່ອພຣະຢາເວໄດ້ກ່າວກັບເພິ່ນວ່າ, "ເຈົ້າກໍເຖົ້າແກ່ຫລາຍແລ້ວ,
ແຕ່ຍັງມີແຜ່ນດິນອີກຫລາຍແຫ່ງທີ່ຕ້ອງຢຶດຄອງ.

[2]ນີ້ເປັນແຜ່ນດິນທີ່ຍັງຄົງເຫລືອຢູ່: ຄືທ້ອງຖິ່ນທັງຫມົດຂອງຟີລິສະຕິນ, ແລະ ທ້ອງຖິ່ນທັງຫມົດຂອງຄົນເກຊູ,
[3](ນັບຈາກຊີໂຫນຊຶ່ງຢູ່ທິດຕາເວັນອອກຂອງເອຢິບ ແລະ ເຫນືອຂຶ້ນໄປເຖິງຊາຍແດນຂອງເອັກໂຣນ, ຊຶ່ງເປັນຊັບສິນຂອງຄົນການາອານ;
ຜູ້ປົກຄອງຂອງຟີລິສະຕິນມີຫ້າຄົນຄື: ຊາວກາຊາ, ຊາວອາສະໂດດ, ຊາວອາສະເກໂລນ, ຊາວກາດ ແລະ ຊາວເອກໂຣນ -
ເຂດແດນຂອງອາວີມ).
[4]ທາງຕອນໃຕ້, ຍັງມີແຜ່ນດິນທັງຫມົດຂອງຄົນການາອານ, ແລະ ເມອາຣາຊຶ່ງເປັນຂອງຊາວຊີໂດນ,
ເຖິງເຂດເມືອງອາເຟັກເຖິງເຂດແດນຂອງຄົນອາໂມຣິດ;[5]ແຜ່ນດິນຂອງຊາວເກບາ, ແລະ ເລບານອນທັງຫມົດໄປທາງທິດຕາເວັນອອກ,
ຈາກບາອານກາດທີ່ຢູ່ຕີນພູເຂົາເຮີໂມນເຖິງເລໂບ ຮາມັດ.
[6]ເຊັ່ນດຽວກັນ ຜູ້ທີ່ອາໄສເທິງເນີນພູຈາກເລບານອນທັງຫມົດຈົນເຖິງມີສະເຣໂຟດມາອິມ, ລວມທັງປະຊາຊົນທັງຫມົດຂອງຊີໂດນ.
ເຮົາຈະຂັບໄລ່ພວກເຂົາອອກໄປຕໍ່ຫນ້າກອງທັບຂອງອິສະຣາເອນ. ຈົ່ງແນ່ໃຈວ່າໄດ້ມອບດິນແດນໃຫ້ອິສະຣາເອນເປັນມໍຣະດົກ,
ຕາມທີ່ເຮົາໄດ້ສັ່ງເຈົ້າແລ້ວ.[7]ຈົ່ງແບ່ງດິນແດນນີ້ເປັນມໍຣະດົກໃຫ້ແກ່ເຜົ່າຕ່າງໆເກົ້າເຜົ່າ ແລະ ເຄິ່ງຫນຶ່ງຂອງເຜົ່າມານາເຊ."
[8]ສ່ວນອີກເຄິ່ງຫນຶ່ງຂອງເຜົ່າມານາເຊ, ເຜົ່າຣູເບັນ ແລະ
ເຜົ່າກາດໄດ້ຮັບມໍຣະດົກຂອງພວກເຂົາທີ່ໂມເຊໄດ້ໃຫ້ພວກເຂົາທິດຕາເວັນອອກຂອງແມ່ນ້ຳຈໍແດນ,[9]ຈາກອາໂລເອຊຶ່ງຢູ່ແຄມຮ່ອມພູອາກໂນນ
(ລວມທັງເມືອງທີ່ຢູ່ທ່າມກາງຮ່ອມພູ), ເຖິງພູພຽງທັງຫມົດຂອງເມືອງເມເດບາໄປຈົນເຖິງດີໂບນ;
[10]ເມືອງທັງຫມົດນີ້ຂອງເຈົ້າສີໂຫນກະສັດຂອງຄົນອາໂມຣິດ, ຜູ້ຊຶ່ງຄອບຄອງຢູ່ໃນເຮັດຊະໂບນ, ໄກອອກໄປຈົນເຖິງເຂດແດນຄົນອຳໂມນ.
[11]ກີເລອາດ ແລະ ທ້ອງຖິ່ນຂອງ ຄົນເກຊູ ແລະ ຄົນມາອາກາ, ທັງຫມົດຂອງພູເຂົາເຮີໂມນ, ບາຊານທັງຫມົດເຖິງສາເລກາ;
[12]ອານາຈັກທັງຫມົດຂອງເຈົ້າໂອກໃນບາຊານ, ຜູ້ຊຶ່ງຄອບຄອງໃນອັດຊະຕາໂລດ ແລະ ເອັດເຣອີ -
ເຫລົ່ານີ້ຄືສິ່ງທີ່ຖືກຖິ້ມໄວ້ໃຫ້ເປັນສິ່ງທີ່ເຫລືອຢູ່ຈາກພວກເຣຟາອິມ - ໂມເຊຮົບຊະນະພວກເຂົາແລະ ໄດ້ໄລ່ພວກເຂົາອອກໄປ.
[13]ແຕ່ປະຊາຊົນອິສະຣາເອນ ບໍ່ໄດ້ຂັບໄລ່ຄົນ ເກຊູ ຫລືຄົນມາອາກາອອກໄປ. ດ້ວຍເຫດນີ້,
ຊາວເກຊູກັບຊາວມາອາກາຈຶ່ງຍັງອາໄສຢູ່ທ່າມກາງອິສະຣາເອນ ຈົນເຖິງທຸກວັນນີ້.
[14]ສຳລັບເຜົ່າເລວີພຽງເຜົ່າດຽວເທົ່ານັ້ນ ທີ່ໂມເຊບໍ່ໄດ້ມອບສ່ວນມໍຣະດົກ. ໃຫ້ເຄື່ອງຖວາຍແດ່ພຣະຢາເວ,
ພຣະເຈົ້າຂອງອິສະຣາເອນທີ່ເຮັດດວ້ຍໄຟນັ້ນເປັນມໍຣະດົກຂອງພວກເຂົາ, ຕາມທີ່ພຣະເຈົ້າໄດ້ສັ່ງໄວ້ກັບໂມເຊ.
[15]ໂມເຊໄດ້ມອບມໍຣະດົກໃຫ້ເຜົ່າຣູເບັນ, ຕະກູນຕໍ່ຕະກູນ.[16]ເຂດແດນຂອງພວກເຂົານັບຈາກອາໂຣເອ, ເທິງຝັ່ງຂອງແຄມແມ່ນ້ຳອາກໂນນ ແລະ
ເມືອງທີ່ຢູ່ທ່າມກາງຮ່ອມພູ ແລະ ເຂດພູພຽງທັງຫມົດທີ່ຢູ່ອ້ອມແອ້ມເມືອງເມເດບາ.
[17]ເຜົ່າລູເບັນເຊັ່ນກັນກໍໄດ້ຮັບເຮັດຊະໂບນແລະ ເມືອງທຸກເມືອງທີ່ຢູ່ໃນເຂດພູພຽງນີ້ຄື: ດີໂບນ, ແລະ ບາມົດບາອານ, ແລະ ເບັດບາອານເມໂອນ,
[18]ແລະ ຢາຮາດ, ແລະ ເກເດໂມດ, ແລະ ເມຟາອາດ,[19]ແລະ ກີຣິອາດທາອິມ, ແລະ ສິບມາ, ແລະ ເຊເຣັດຊາຮາ,
ທີ່ຢູ່ເທິງພູນ້ອຍຕາມຮ່ອມພູນັ້ນ.
[20]ຣູເບັນກໍເຊັ່ນກັນໄດ້ຮັບເບັດເປອໍ, ເນີນພູຂອງປີສະກາ, ແລະ ເບັດເຢຊີໂມດ,[21]ເມືອງທັງຫມົດຊຶ່ງຢູ່ຕາມພູພຽງ, ແລະ
ອານາຈັກທັງຫມົດຂອງເຈົ້າສີໂຫນ ກະສັດຂອງຄົນອາໂມຣິດ, ຜູ້ຊຶ່ງຄອບຄອງຢູ່ໃນເຮັດຊະໂບນ,
ຜູ້ຊຶ່ງໂມເຊໄດ້ເຮັດໃຫ້ພ່າຍແພ້ພ້ອມກັບພວກຜູ້ນຳຂອງຊາວມີດີອານ, ເອວີ, ເຣເກມ, ຊູເຣ, ຮູເຣ, ແລະເຣບາເປັນພວກເຈົ້າຊາຍຂອງສີໂຫນ,
ຜູ້ຊຶ່ງອາໄສຢູ່ໃນແຜ່ນດິນນັ້ນ.
[22]ປະຊາຊົນອິສະຣາເອນໄດ້ຂ້າ ບາລາອາມລູກຂອງເບອໍ, ຜູ້ເປັນຄົນດູໂຊກຊາຕາເສຍດ້ວຍດາບ,
ທ່າມກາງພວກທີ່ເຫລືອເຫລົ່ານັ້ນທີ່ພວກເຂົາກໍໄດ້ຂ້າເສຍ.[23]ອານາເຂດຂອງເຜົ່າຣູເບັນທີ່ຢູ່ມີແມ່ນ້ຳເປັນເຂດແດນ;
ນີ້ເປັນມໍຣະດົກຂອງຄົນຣູເບັນ, ຕາມຕະກູນຂອງພວກເຂົາ, ລວມທັງເມືອງຕ່າງໆກັບຫມູ່ບ້ານຕ່າງໆ.
[24]ນີ້ຄືສິ່ງທີ່ໂມເຊໄດ້ກ່າວໄວ້ກັບພວກກາດ, ຕາມຕະກູນຕໍ່ຕະກູນ:[25]ອານາເຂດຂອງເຂົາຄືຢາເຊ, ແລະ ເມືອງທັງຫມົດຂອງກີເລອາດ, ແລະ
ເຄິ່ງຫນຶ່ງຂອງແຜ່ນດິນຄົນອຳໂມນ, ເຖິງອາໂຣເອ, ຊຶ່ງຢູ່ທາງຕາເວັນອອກຂອງເມືອງຣັບບາ,[26]ຕັ້ງແຕ່ເມືອງເຮັດຊະໂບນ ເຖິງຣາມັດມີສະເປ ແລະ
ເບໂຕນິມ ແລະ ຕັ້ງແຕ່ມະຫານາອິມຈົນເຖິງເຂດແດນຂອງເດບີ.
[27]ໃນຮ່ອມພູ, ໂມເຊໄດ້ມອບເບັດຮາຣາມ, ເບັດນິມຣາ, ສຸໂຄດ ແລະ ຊາໂຟນ, ອານາຈັກສ່ວນທີ່ເຫລືອຂອງເຈົ້າສີໂຫນກະສັດແຫ່ງເຮັດຊະໂບນ,
ມີແມ່ນ້ຳຈໍແດນເປັນເຂດແດນ, ຈົນລົງມາເຖິງທະເລກິນເນເຣ, ທາງທິດຕາເວັນອອກຂອງແມ່ນ້ຳຈໍແດນ.[28]ນີ້ເປັນມໍຣະດົກຂອງຄົນເຜົ່າກາດ,
ຕາມຕະກູນຂອງເຂົາລວມທັງເມືອງຕ່າງໆກັບຫມູ່ບ້ານໂດຍຮອບຂອງເມືອງນັ້ນດ້ວຍ.
[29]ໂມເຊໄດ້ມອບມໍຣະດົກໃຫ້ກັບເຜົ່າມານາເຊເຄິ່ງເຜົ່າ. ເປັນສ່ວນທີ່ໄດ້ມອບໃຫ້ແກ່ເຄິ່ງຫນຶ່ງຂອງຄົນເຜົ່າມານາເຊ, ຕາມຕະກູນຂອງພວກເຂົາ.
[30]ອານາເຂດຂອງເຂົາທັງຫລາຍເລີ່ມຈາກມະຫານາອິມ, ບາຊານທັງຫມົດ ອານາຈັກຂອງເຈົ້າໂອກກະສັດຂອງບາຊານ,
ແລະເມືອງທຸກເມືອງຂອງຢາອີຊຶ່ງຢູ່ໃນບາຊານຫົກສິບເມືອງ.[31]ກີເລອາດເຄິ່ງຫນຶ່ງ ແລະ ອັດຊະທາໂຣດ ແລະ ເອເດອີ
(ເມືອງຕ່າງໆຂອງເຈົ້າໂອກໃນບາຊານ). ເມືອງເຫລົ່ານີ້ໄດ້ຖືກມອບໃຫ້ຕະກູນມາກີລູກຊາຍຂອງມານາເຊ - ຄືເຄິ່ງຫນຶ່ງຂອງຊາວມາກີ,
ໄດ້ມອບໃຫ້ແກ່ແຕ່ລະຄອບຄົວຂອງພວກເຂົາ.
[32]ນີ້ຄືມໍຣະດົກຊຶ່ງໂມເຊໄດ້ຈັດສັນໃຫ້ແກ່ພວກເຂົາ ຢູ່ໃນທົ່ງພຽງໂມອາບ, ຟາກແມ່ນ້ຳຈໍແດນທາງທິດຕາເວັນອອກຂອງເມືອງເຢຣິໂກ.
[33]ໂມເຊບໍ່ໄດ້ມອອບມໍຣະດົກໃຫ້ແກ່ຄົນເຜົ່າເລວີ. ພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ຊຶ່ງເປັນມໍຣະດົກຂອງພວກເຂົາດັ່ງທີ່ພຣະອົງ,
ໄດ້ສັ່ງໄວ້ກັບພວກເຂົາ.

 generated on Tue Jun 17 19:01:42 2025

14 [1]ຕໍ່ໄປນີ້ເປັນພື້ນທີ່ຂອງແຜ່ນດິນທີ່ປະຊາຊົນອິສະຣາເອນໄດ້ຮັບມອບເປັນມໍຣະດົກຂອງພວກເຂົາ, ໃນແຜ່ນດິນການາອານ,
ຊຶ່ງເອເລອາຊາປະໂລຫິດ, ແລະ ໂຢຊວຍລູກຊາຍຂອງນູນ, ແລະບັນດາຜູ້ນໍາເຜົ່າຂອງຄອບຄົວ
ບັນພະບຸຣຸດຂອງເຂົາໃນປະຊາຊົນອິສະຣາເອນໄດ້ຈັດສັນໃຫ້ແກ່ພວກເຂົາ.

[2]ມໍຣະດົກຂອງພວກເຂົາໄດ້ຈັບສະຫລາກແບ່ງກັນ ໃນລະຫວ່າງຄົນເກົ້າເຜົ່າເຄິ່ງ, ຕາມທີ່ພຣະຢາເວໄດ້ຊົງສັ່ງໄວ້ໂດຍມືຂອງໂມເຊ.
[3]ເພາະໂມເຊໄດ້ໃຫ້ມໍຣະດົກແກ່ສອງເຜົ່າເຄິ່ງທາງຟາກນັ້ນຂອງຈໍແດນແລ້ວ, ແຕ່ເຂົາບໍ່ໄດ້ໃຫ້ມໍຣະດົກແກ່ພວກເລວີ.
[4]ເຜົ່າພັນຂອງໂຢເຊັບແທ້ຈິງແລ້ວມີຢູ່ສອງເຜົ່າ, ມານາເຊ ແລະ ເອຟຣາອິມ. ພວກເລວີບໍ່ໄດ້ຮັບສ່ວນຂອງມໍຣະດົກໃນແຜ່ນດິນ,
ໄດ້ແຕ່ພຽງບາງເມືອງເພື່ອຢູ່ອາໄສເທົ່ານັ້ນ, ກັບແຜ່ນດິນທົ່ງຫຍ້າສໍາລັບສັດລ້ຽງ ແລະ ສໍາລັບເປັນແຫລ່ງຊັບພະຍາກອນຂອງພວກເຂົາ.
[5]ປະຊາຊົນອິສະຣາເອນໄດ້ເຮັດຕາມທີ່ພຣະຢາເວໄດ້ຊົງສັ່ງໂມເຊ, ດັ່ງນັ້ນພວກເຂົາຈຶ່ງໄດ້ແຜ່ນດິນ.
[6]ແລ້ວຄົນເຜົ່າຢູດາໄດ້ມາຫາໂຢຊວຍ ທີ່ກິນການ. ກາເລັບລູກຊາຍຂອງເຢຟຸນເນຊາວ ເກນິດ, ໄດ້ກ່າວແກ່ເພິ່ນວ່າ,
"ທ່ານໄດ້ຮູ້ເລື່ອງຊຶ່ງພຣະຢາເວໄດ້ກ່າວກັບໂມເຊຄົນຂອງພຣະເຈົ້າ, ກ່ຽວກັບທ່ານ ແລະ ຂ້ານ້ອຍແລ້ວທີ່ຄາເດັດບາເນຍ.
[7]ຂ້ານ້ອຍມີອາຍຸສີ່ສິບປີໂມເຊຜູ້ຮັບໃຊ້ຂອງພຣະເຈົ້າ, ໄດ້ໃຫ້ຂ້ານ້ອຍຈາກຄາເດັດບາເນຍ ເພື່ອສອດແນມເບິ່ງແຜ່ນດິນ.
ຂ້ານ້ອຍໄດ້ນໍາມາລາຍງານໃຫ້ແກ່ເຂົາຕາມຄວາມຄິດເຫັນຂອງຂ້ານ້ອຍ.
[8]ແຕ່ສ່ວນພີ່ນ້ອງຊຶ່ງຂຶ້ນໄປພ້ອມກັບຂ້າພະເຈົ້າໄດ້ເຮັດໃຫ້ປະຊາຊົນຢ້ານກົວ. ແຕ່ຂ້າພະເຈົ້າເອງໄດ້ຕິດຕາມພຣະຢາເວພຣະເຈົ້າ
ຂອງຂ້າພະເຈົ້າຢ່າງສຸດໃຈ. [9]ໂມເຊໄດ້ສັນຍາໃນວັນນັ້ນ, ກ່າວວ່າ,
'ແນ່ນອນແຜ່ນດິນຊຶ່ງຕີນຂອງທ່ານໄດ້ຍ່າງຢຽບໄປນັ້ນຈະຕົກເປັນມໍຣະດົກຂອງທ່ານ ແລະ ຂອງລູກຫລານຂອງທ່ານສືບໄປເປັນນິດ,
ເພາະວ່າທ່ານໄດ້ຕິດຕາມພຣະຢາເວພຣະເຈົ້າຂອງຂ້າພະເຈົ້າຢ່າງສຸດໃຈ.'
[10]ບັດນີ້, ເບິ່ງເຖີດ! ພຣະຢາເວໄດ້ຊົງເຮັດໃຫ້ຂ້າພະເຈົ້າຍັງມີຊີວິດຢູ່ຕະຫລອດສີ່ສິບຫ້າປີ, ດັ່ງນັ້ນພຣະຢາເວໄດ້ກ່າວເຊັ່ນນີ້ແກ່ໂມເຊ,
ໃນຂະນະທີ່ຄົນອິສະຣາເອນໄດ້ເດີນທາງໃນຖິ່ນແຫ້ງແລ້ງກັນດານ. ບັດນີ້, ເບິ່ງເຖີດ! ວັນນີ້ຂ້າພະເຈົ້າມີອາຍຸແປດສິບຫ້າປີແລ້ວ.
[11]ຂ້າພະເຈົ້າຍັງແຂງແຮງໃນວັນນີ້ດັ່ງທີ່ຂ້າພະເຈົ້າໄດ້ເຄີຍເປັນໃນວັນທີ່ໂມເຊໄດ້ສົ່ງຂ້າພະເຈົ້າອອກໄປ.
ກໍາລັງຂອງຂ້າພະເຈົ້າໃນເວລານີ້ເປັນເຫມືອນກໍາລັງຂອງຂ້າພະເຈົ້າທີ່ເຄີຍເປັນ, ບໍ່ວ່າເພື່ອສົງຄາມ ເພື່ອອອກໄປຫລືເພື່ອເຂົ້າມາ.
[12]ດັ່ງນັ້ນຂໍມອບດິນແດນເນີນພູນີ້, ຊຶ່ງພຣະຢາເວໄດ້ຊົງສັນຍາກັບຂ້າພະເຈົ້າໃນວັນນັ້ນ. ເພາະວ່າທ່ານໄດ້ຍິນໃນວັນນັ້ນ
ທີ່ເຫລົ່າຄົນອານາກິມຢູ່ທີ່ນັ້ນ ພ້ອມດ້ວຍເມືອງໃຫຍ່ມີກໍາແພງລ້ອມຢ່າງຫນັ້ນຄົງ. ບາງທີພຣະຢາເວຈະສະຖິດກັບຂ້າພະເຈົ້າ ແລະ
ຂ້າພະເຈົ້າກໍຂັບໄລ່ພວກເຂົາອອກໄປໄດ້ ດັ່ງທີ່ພຣະຢາເວໄດ້ກ່າວໄວ້ແລ້ວ."
[13]ແລ້ວໂຢຊວຍກໍອວຍພອນເຂົາ ແລະ ຍົກເມືອງເຮັບໂຣນໃຫ້ກາເລັບລູກຊາຍເຢຟຸນເນເປັນມໍຣະດົກ.
[14]ດັ່ງນັ້ນເຮັບໂຣນໄດ້ກາຍເປັນມໍລະດົກແກ່ກາເລັບລູກຊາຍເຢຟຸນເນຕະກູນເກນິດຈົນເຖິງທຸກວັນນີ້,
ເຂົາໄດ້ຕິດຕາມພຣະຢາເວພຣະເຈົ້າຂອງອິສະຣາເອນຢ່າງສຸດໃຈ. [15]ບັດນີ້ຊື່ຂອງເຮັບໂຣນແຕ່ເດີມມີຊື່ວ່າຊອງອາກບາ.
(ອາກບາເປັນເມືອງໃຫຍ່ທີ່ສຸດຂອງຊາວອານາກິມ.) ແລ້ວແຜ່ນດິນຈຶ່ງໄດ້ສະຫງົບຈາກການເສິກສົງຄາມ.

 generated on Tue Jun 17 19:01:42 2025

15 1ການຈັດສັນທີ່ດິນສຳລັບປະຊາຊົນເຜົ່າຢູດາ, ໄດ້ຈັດໃຫ້ຕາມຕະກູນພວກເຂົາ, ທາງດ້ານໃຕ້ຂະຫຍາຍໄປເຖິງຊາຍແດນແຫ່ງເອໂດມ,
ເຖິງຖິ່ນແຫ້ງແລ້ງກັນດານແຫ່ງຊິນ ເປັນທີ່ສຸດປາຍດ້ານໃຕ້.2ເຂດແດນຂອງພວກເຂົາທາງທິດໃຕ້ນັ້ນຕັ້ງຕົ້ນຈາກປາຍທະເລເກືອ,
ຄືຕັ້ງແຕ່ອ່າວຊຶ່ງຫັນໄປທາງທິດໃຕ້.

3ອານາເຂດຂອງພວກເຂົາໄດ້ເຢີ່ນໄປທາງທິດໃຕ້ຂອງເນີນພູອັກລັບບີມ ແລະ ຜ່ານຕໍ່ໄປເຖິງຊິນ, ແລະ ຂຶ້ນໄປທາງທິດໃຕ້ຂອງຄາເດັດບາເນຍ,
ຕາມທາງເຮັບໂຣນ, ແລະ ຂຶ້ນໄປເຖິງອັດດາ, ທີ່ລ້ຽວໄປເຖິງກາກກາ.4ຜ່ານຕໍ່ໄປເຖິງອຳຊະໂມນ, ໄປຕາມລຳນ້ຳຂອງເອຢິບ, ແລະ
ມາສິ້ນສຸດທີ່ທະເລ. ນີ້ເປັນເຂດແດນທາງທິດໃຕ້ຂອງພວກເຂົາ.
5ເຂດແດນທາງທິດຕາເວັນອອກຄືທະເລເກືອ, ໄປເຖິງປາກແມ່ນ້ຳຈໍແດນ. ເຂດແດນທາງທິດເຫນືອຕັ້ງແຕ່ອ່າວທີ່ທະເລປາກແມ່ນ້ຳຈໍແດນ.
6ຂຶ້ນໄປເຖິງເບັດໂຮກະລາ ແລະ ຜ່ານຕໍ່ໄປເຖິງເບັດອາຣາບາ. ແລ້ວຂຶ້ນໄປເຖິງໂງ່ນຫີນຂອງໂບຮານ ລູກຊາຍຂອງຣູເບັນ.
7ແລ້ວເຂດແດນກໍຂຶ້ນໄປເຖິງເດບີຈາກຮ່ອມພູອາໂຄ, ແລະ ຂຶ້ນໄປທາງເຫນືອລ້ຽວໄປທາງກິນການຊຶ່ງຢູ່ກົງກັນຂ້ວາມເນີນພູອາດູມມີມ,
ຊຶ່ງຢູ່ທາງໃຕ້ຂອງຮ່ອມພູ ແລ້ວເຂດແດນກໍໄດ້ຜ່ານໄປເຖິງນ້ຳພຸເອນເຊເມດ ແລະ ໄປເຖິງເອນໂຣເກນ.8ແລ້ວເຂດແດນໄດ້ຂຶ້ນໄປທາງຮ່ອມພູ
ເບນຮິນໂນມ ເຖິງທາງທິດໃຕ້ເມືອງຂອງຄົນເຢບຸດ (ນັ້ນຄືເຢຣູຊາເລັມ,). ແລ້ວຂຶ້ນໄປເຖິງຍອດພູ ທີ່ເທິງຍອດຢູ່ຫນ້າຮ່ອມພູຮິນໂນມ,
ທາງທິດຕາເວັນຕົກ, ຊຶ່ງຢູ່ທາງເຫນືອສຸດຂອງຮ່ອມພູເຣຟາອິມ.
9ແລ້ວຊາຍແດນເລີຍໄປຈາກຍອດພູເຖິງນ້ຳພຸແຫ່ງລຳນ້ຳເນັບໂທອາ, ແລະ ຈາກທີ່ນັ້ນກໍມາເຖິງເມືອງຕ່າງໆຂອງພູເຂົາເອຟະໂຣນ.
ແລ້ວຊາຍແດນກໍລ້ຽວໄປທາງບາອາລາ (ເຫມືອນກັນກັບກີຣີອາດເຢອາຣີມ).10ແລ້ວຊາຍແດນກໍລ້ຽວໄປບາອາລາ,
ໄປທາງທິດຕາເວັນຕົກເຖິງພູເຂົາເສອີ, ແລະ ຜ່ານໄປຕາມໄຫລ່ພູເຢອາຣີມທາງເຫນືອ (ເມືອງດຽວກັບເກສາໂລນ), ລົງໄປເຖິງເມືອງເບັດເຊເມດ,
ແລະ ຜ່ານເມືອງຕິມນາ.
11ຊາຍແດນໄດ້ຍາວອອກໄປຂ້າງເນີນພູດ້ານເຫນືອຂອງເມືອງເອກໂຣນ, ແລ້ວກໍລ້ຽວໄປຫາເມືອງຊິກເກໂຣນ ແລະ ຜ່ານໄປເຖິງພູເຂົາບາອາລາ,
ຈາກທີ່ນັ້ນກໍໄປເຖິງ ຢັບເນເອວ. ຊາຍແດນກໍມາສິ້ນສຸດທີ່ທະເລ.12ຊາຍແດນທາງທິດຕາເວັນຕົກ ຄືທະເລໃຫຍ່ ແລະ ຝັ່ງທະເລ.
ນີ້ຄືຊາຍແດນລ້ອມຮອບເຜົ່າຄົນຢູດາຕາມຕະກູນຕໍ່ຕະກູນ.
13ໃນການປະຕິບັດຕາມຄຳສັ່ງຂອງພຣະຢາເວທີ່ໄດ້ກ່າວກັບໂຢຊວຍ, ໂຢຊວຍໄດ້ມອບທີ່ດິນສ່ວນຫນຶ່ງໃນເຂດຂອງຄົນຢູດາ
ໃຫ້ແກ່ກາເລັບລູກຊາຍຂອງເຢຟຸນເນການມອບແຜ່ນດິນທ່າມກາງເຜົ່າຢູດາ, ຄືກີຣີອາດ, ອາກບາ, ນັ້ນຄືເມືອງເຮັບໂຣນ
(ອາກບາເປັນພໍ່ຂອງອານາກ).14ກາເລັບໄດ້ຂັບໄລ່ລູກສາມຄົນຂອງອານາກອອກຈາກທີ່ນັ້ນຄື: ເຊຊາຍ, ອາຮີມານ, ແລະ
ຕານໄມວົງວານຂອງອານາກ.15ເຂົາໄດ້ຂຶ້ນໄປຈາກທີ່ນັ້ນຜະເຊີນຫນ້າກັບຜູ້ທີ່ຢູ່ອາໄສຂອງເດບີ (ເດບີເຄີຍໄດ້ຊື່ວ່າກີຣີອາດເຊເຟ).
16ກາເລັບໄດ້ກ່າວວ່າ, "ຊາຍໃດທີ່ໂຈມຕີເມືອງກີຣີອາດເຊເຟ ແລະ
ຢຶດໄດ້ເຮົາຈະຍົກອັກສາລູກສາວຂອງເຮົາໃຫ້ເປັນເມຍ."17ເມື່ອໂອດນີເອນລູກຊາຍເກນາດ, ນ້ອງຊາຍຂອງກາເລັບຢຶດເມືອງນັ້ນໄດ້,
ກາເລັບຈຶ່ງຍົກອັກສາລູກສາວຂອງເຂົາໃຫ້ແຕ່ງງານກັບລາວ.
18ຢູ່ມາຫລັງຈາກນັ້ນ, ອັກສາໄດ້ມາຫາໂອດນີເອນ ແລະ ນາງໄດ້ຊັກຊວນເຂົາໃຫ້ຂໍທົ່ງນາຫນຶ່ງຕອນຈາກພໍ່ຂອງນາງ.
ເມື່ອນາງລົງຈາກຫລັງລໍຂອງນາງ, ກາເລັບໄດ້ຖາມວ່າ, "ເຈົ້າຕ້ອງການຫຍັງ?"
19ອັກສາໄດ້ຕອບວ່າ, "ຂໍຄວາມກະຣຸນາເປັນພິເສດຢ່າງຫນຶ່ງເຖີດ, ເພາະທ່ານໄດ້ໃຫ້ແຜ່ນດິນຂອງເນເກບແກ່ຂ້ານ້ອຍ:
ຈຶ່ງຂໍທ່ານໄດ້ໃຫ້ນ້ຳພຸແກ່ຂ້ານ້ອຍດ້ວຍ." ແລ້ວກາເລັບກໍໄດ້ມອບນ້ຳພຸເທິງ ແລະ ນ້ຳພຸລຸ່ມໃຫ້ແກ່ນາງ.
20ຕໍ່ໄປນີ້ເປັນມໍຣະດົກຂອງເຜົ່າຄົນຢູດາ, ທີ່ມອບໃຫ້ຕາມຕະກູນຂອງພວກເຂົາ.
21ເມືອງຕ່າງໆທີ່ເປັນຂອງເຜົ່າຄົນຢູດາຊຶ່ງຢູ່ທາງທິດໃຕ້ສຸດ, ທາງຊາຍແດນເອໂດມ, ຄືເມືອງຂັບເຊເອນ, ເອເດ, ແລະຢາກູເຣ.22ກີນາ, ດີໂມນາ,
ອາດາດາ,23ເຄເດັດ, ຮາໂຊ, ອິດນັນ,24ຊີເຟ, ເທເລັມ, ເບອາໂລດ.
25ຮາໂຊຮາດັດຕາ, ເກຣີໂອດ ເຮຊະໂຣນ (ເມືອງນີ້ກໍຍັງເປັນທີ່ຮູ້ຈັກກັນວ່າເປັນເມືອງຮາໂຊດ້ວຍ),26ອາມາມ, ເຊມາ, ໂມລາດາ.27ຮາຊາກັດດາ,
ເຮຊະໂມນ, ເບັດເປເລັດ,28ຮາຊາຊູອານ, ເບເອນເຊບາ, ບີຊີໂອທີຢາ.
29ບາອາລາ, ອີອິມ, ເອເຊມ,30ເອນໂຕລັດ, ເກສີນ, ໂຮມາ.31ຊິກລັກ, ມາດມານນາ, ສັນສັນນາ,32ເລບາໂອດ, ຊິນຮີມ, ອາອິນ ແລະ ຣິມໂມນ.
33ໃນທີ່ເນີນພູຕ່ຳລົງໄປທາງທິດຕາເວັນຕົກ, ທີ່ມີເມືອງເອຊະຕາໂອນ, ໂຊຣາ, ອາຊະນາ.34ຊາໂນອາ, ເອັນກັນນີມ, ທັບປູອາ, ເອນາມ.35ຢາຣະມຸດ,
ອາດູນລຳ, ໂສໂກ, ອາເຊກາ.36ຊາອາຣາອິມ, ອາດີທາອິມ, ເກເດຣາ ແລະເກເດໂຣທາອິມ, ເຫລົ່ານີ້ຄືເມືອງ
ສິບສີ່ເມືອງລວມທັງຫມູ່ບ້ານຂອງພວກເຂົາ.
37ເຊນານ, ຮາດາຊາ, ມິກດັນກາດ,38ດີເລອານ, ມີຊະປາ, ໂຢກເທເອນ,39ລາກິດ, ໂບຊະກາດ, ເອກໂລນ.
40ກັບໂບນ, ລາມາມ, ກິດລິດ.41ເກເດໂຣດ, ເບັດດາໂກນ, ນາອາມາ ແລະມັກເກດາ, ລວມເປັນສິບຫົກເມືອງລວມທັງຫມູ່ບ້ານຕ່າງໆ.
42ລິບນາ, ເອເທ, ອາຊານ,43ອີຟະຕາ, ອາຊະນາ, ເນຊິບ,44ເກອີລາ, ອັກຊິບ, ມາເຣຊາ ລວມເປັນເກົ້າເມືອງລວມທັງຫມູ່ບ້ານຕ່າງໆ.
45ເອັກໂຣນ, ກັບເມືອງຕ່າງໆ ແລະ ຫມູ່ບ້ານໂດຮອບເມືອງນັ້ນ;46ຈາກເອັກໂຣນເຖິງທະເລໃຫຍ່, ທຸກເມືອງທີ່ຢູ່ໃກ້ເມືອງອາຊະໂດດ,
ກັບຫມູ່ບ້ານໂດຍຮອບເມືອງນັ້ນ.47ອາຊະໂດດ, ກັບເມືອງຕ່າງໆ ແລະ ຫມູ່ບ້ານໂດຍຮອບເມືອງນັ້ນ ຈົນເຖິງລຳນ້ຳຂອງເອຢິບ, ແລະ
ທະເລໃຫຍ່ພ້ອມກັບທາງຝັ່ງທະເລ.
48ໃນດິນແດນແຖບເນີນພູຄື ຊາເມຍ, ຢັດຕີ, ໂສໂກ,49ດານນາ, ກີລີອາດສັນນາ, (ຄືເມືອງເດບີ),50ອານາບ, ເອຊະເຕມົວ, ອານິມ,51ໂກເຊັນ,
ໂຮໂລນ, ກີໂລນ. ລວມເປັນສິບເອັດເມືອງ, ກັບຫມູ່ບ້ານໂດຍຮອບ.
52ອາຣັບ, ດູມາ, ເອຊານ,53ຢານີມ, ເບັດຕັບປູອາ, ອາເຟກາ,54ຮຸມຕາ, ກີຣີອາດອາກບາ,(ຊຶ່ງແມ່ນເມືອງເຮັບໂຣນ) ແລະເມືອງຊີໂອເຣ.
ລວມເປັນເກົ້າເມືອງກັບຫມູ່ບ້ານໂດຍຮອບ.
55ມາໂອນ, ກາເມນ, ຊີເຟ, ຢຸດຕາ,56ຢິດຊະເຣນ, ໂຢກເດອາມ, ຊາໂນອາ,57ກາອີນ, ກີເບອາ, ແລະ ຕິມນາ.
ລວມເປັນສິບເມືອງກັບຫມູ່ບ້ານໂດບຮອບ.
58ຮັນຮູນ, ເບັດຊູເຣ, ເກໂດເຣ,59ມາອາຣາດ, ເບັດອາໂນດ, ແລະ ເມືອງເອນເຕໂກນລວມເປັນຫົກເມືອງກັບຫມູ່ບ້ານໂດຍຮອບ.


generated on Tue Jun 17 19:01:42 2025

[60]ກີຣີອາດບາອານ, (ຄືເມືອງກີຣີອາດເຢອາຣີມ), ແລະຣັບບາ, ລວມເປັນສອງເມືອງກັບຫມູ່ບ້ານໂດຍຮອບ.[61]ໃນຖິ່ນທຸຣະກັນດານຄື
ເບັດອາຣາບາ, ມິດດິນ, ເສກະກາ.[62]ນິບຊານ, ເມືອງບໍ່ເກືອ ແລະ ເອນເກດີ. ເຫລົ່ານີ້ລວມເປັນຫົກເມືອງກັບຫມູ່ບ້ານໂດຍຮອບ.
[63]ແຕ່ຄົນເຢບຸດ, ຊຶ່ງເປັນຊາວເມືອງ ເຢຣູຊາເລັມນັ້ນ, ຄົນຢູດາບໍ່ສາມາດຂັບໄລ່ພວກເຂົາອອກໄປໄດ້,
ດັ່ງນັ້ນຄົນເຢບຸດຈຶ່ງອາໄສຢູ່ກັບຄົນຢູດາຈົນເຖິງທຸກວັນນີ້.


generated on Tue Jun 17 19:01:42 2025

16 [1]ການຈັດສັນທີ່ດິນຂອງເຜົ່າຂອງໂຢເຊັບ ນັ້ນໄດ້ຂະຫຍາຍຈາກແມ່ນ້ຳຈໍແດນ ທີ່ເມືອງເຢຣິໂກ,
ຄືທາງທິດຕາເວັນອອກຂອງນ້ຳພຸຂອງເຢຣິໂກ, ເຂົ້າໄປໃນຖິ່ນທຸຣະກັນດານ, ຂຶ້ນໄປຈາກເຢຣິໂກເຂົ້າໄປໃນແດນເນີນພູເມືອງເບັດເອນ.
[2]ແລ້ວຈາກນັ້ນກໍຈາກເມືອງເບັດເອນໄປຍັງເມືອງລູເຊ ແລະ ຜ່ານເລີຍໄປເຖິງເມືອງອາທາໂຣດ, ໃນເຂດຂອງຄົນອັດດາ.

[3]ແລ້ວລົງໄປທາງທິດຕາເວັນຕົກ ເຖິງເຂດຂອງຄົນຢາຟະເຣດ, ທີ່ໄກອອກໄປຈົນເຖິງເຂດເມືອງເບັດໂຮໂຣນລຸ່ມ, ແລະ ໄປເຖິງເມືອງເກເຊ;
ໄປສິ້ນສຸດທີ່ທະເລ.[4]ໂດຍວິທີນີ້ເຜົ່າຂອງໂຢເຊັບຄືມານາເຊ, ແລະ ເອຟຣາອິມໄດ້ຮັບມໍຣະດົກຂອງພວກເຂົາ.
[5]ເຂດຂອງເຜົ່າເອຟຣາອິມ ທີ່ໄດ້ຈັດສັນຕາມຕະກູນຂອງພວກເຂົາ ເປັນດັ່ງນີ້ຄື:
ຊາຍແດນຕາມມໍຣະດົກຂອງພວກເຂົາທາງທິດຕາເວັນອອກເລີ່ມຕັ້ງແຕ່ເມືອງອາທາໂຣດ, ອັດດາ, ໄກໄປຈົນເຖິງເບັດໂຮໂຣນ.
[6]ຈາກທີ່ນັ້ນກໍຕໍ່ໄປຈົນເຖິງທະເລ ຈາກເມືອງມິກເມທັດ, ທາງທິດເຫນືອ ແລະ ລ້ຽວມາທາງທິດຕາເວັນອອກເຖິງເມືອງ ຕາອານາດ ຊີໂລ
ແລ້ວຜ່ານພົ້ນເມືອງນີ້ໄປທາງທິດຕາເວັນອອກເຖິງເມືອງຢາໂນອາ.[7]ແລ້ວລົງໄປຈາກເມືອງຢາໂນອາ ໄປຈົນເຖິງເມືອງເຢຣິໂກ,
ສິ້ນສຸດລົງທີ່ແມ່ນ້ຳຈໍແດນ.
[8]ຈາກທັບປູອາ ຊາຍແດນດ້ານຕາເວັນຕົກເຖິງລຳນ້ຳການາ ແລະ ໄປສິ້ນສຸດທີ່ທະເລ. ນີ້ຄືມໍຣະດົກຂອງເຜົ່າເອຟຣາອິມ,
ທີ່ໄດ້ມອບໃຫ້ຄົນຕາມຕະກູນຂອງພວກເຂົາ,[9]ພ້ອມດ້ວຍເມືອງຕ່າງໆ. ທີ່ໄດ້ຮັບການເລືອກສຳລັບເຜົ່າເອຟຣາອິມຕາມມໍຣະດົກຕາມເຜົ່າ
ມານາເຊ - ເມືອງຕ່າງໆທັງຫມົດ, ກັບຫມູ່ບ້ານຕ່າງໆທັງຫມົດ.
[10]ພວກເຂົາບໍ່ໄດ້ຂັບໄລ່ພວກຄົນການາອານ ຊຶ່ງອາໄສຢູ່ໃນເມືອງເກເຊອອກໄປ,
ດັ່ງນັ້ນຄົນການາອານຈຶ່ງອາໄສຢູ່ທ່າມກາງຄົນເອຟຣາອິມຈົນເຖິງທຸກວັນນີ້, ແຕ່ປະຊາຊົນເຫລົ່ານີ້ກໍຖືກບັງຄັບໃຫ້ເຮັດວຽກດັ່ງທາດຮັບໃຊ້.

 generated on Tue Jun 17 19:01:42 2025

# 17

[1]ການຈັດສັນທີ່ດິນໃຫ້ແກ່ເຜົ່າມານາເຊ (ຜູ້ຊຶ່ງເປັນລູກຊາຍກົກຂອງໂຢເຊັບ) -ນັ້ນຄືສຳລັບມາກີລູກຊາຍກົກຂອງມານາເຊ,
ແລະເປັນພໍ່ຂອງກີເລອາດ, ລູກຫລານຂອງມາກີໄດ້ຮັບຈັດສັນທີ່ດິນຂອງກີເລອາດ, ແລະ
ບາຊານເປັນສ່ວນແບ່ງເພາະມາກີເຄີຍເປັນທະຫານ.[2]ທີ່ດິນໄດ້ຖືກຈັດສັນໃຫ້ແກ່ຄົນທີ່ເຫລືອຢູ່ ຂອງຄົນເຜົ່າມານາເຊ,
ໃຫ້ແກ່ຕະກູນຂອງພວກເຂົາຄື: ອາບີເອເຊ, ເຮເລັກ, ອາສະກີເອນ, ເຊເຄມ, ເຮເຟ, ແລະ ເຊມີດາ,
ຄົນເຫລົ່ານີ້ເປັນລູກຫລານຜູ້ຊາຍຂອງຄົນມານາເຊ, ລູກຊາຍຂອງໂຢເຊັບ ໃຫ້ຕາມຕະກູນຂອງເຂົາ.

[3]ບັດນີ້ເຊໂລເຟຮັດ, ລູກຊາຍຂອງເຮເຟ, ລູກຊາຍຂອງກີເລອາດ, ລູກຊາຍຂອງມາກີ, ລູກຊາຍຂອງມານາເຊ,
ເຊໂລເຟຮັດບໍ່ມີລູກຊາຍມີແຕ່ລູກສາວ ຊື່ລູກຂອງເຂົາຄື: ມາຮະລາ, ໂນອາ, ໂຮກະລາ, ມີລະກາ, ແລະ ຕີຣະຊາ.[4]ພວກເຂົາໄດ້ເຂົ້າມາຫາ
ເອເລອາຊາ, ປະໂລຫິດໂຢຊວຍລູກຊາຍຂອງນູນ ແລະ ພວກຜູ້ນຳ ພວກເຂົາໄດ້ກ່າວວ່າ "ພຣະຢາເວ,
ໄດ້ສັ່ງໂມເຊໃຫ້ຍົກມໍຣະດົກໃຫ້ກັບເຮົາເຊັ່ນດຽວກັບພີ່ນ້ອງຂອງເຮົາ". ດັ່ງນັ້ນເພື່ອປະຕິບັດຕາມຄຳສັ່ງຂອງພຣະຢາເວ,
ເຂົາໄດ້ໃຫ້ມໍຣະດົກແກ່ພວກຜູ້ຍິງເຫລົ່ານັ້ນທ່າມກາງພວກພີ່ນ້ອງຂອງພໍ່ຂອງພວກເຂົາ.
[5]ທີ່ດິນສິບສ່ວນຈຶ່ງຖືກມອບໃຫ້ແກ່ຄົນມານາເຊໃນກີເລອາດ ແລະ ບາຊານ, ຊຶ່ງຢູ່ອີກຝັ່ງຫນຶ່ງຂອງແມ່ນ້ຳຈໍແດນ.
[6]ເພາະວ່າລູກສາວຂອງມານາເຊກໍໄດ້ຮັບມໍຣະດົກທ່າມກາງລູກຊາຍຂອງທ່ານ. ແຜ່ນດິນກີເລອາດນັ້ນໄດ້ຈັດສັນໃຫ້ກັບເຜົ່າມານາເຊທີ່ເຫລືອຢູ່.
[7]ເຂດແດນຂອງມານາເຊ ຕັ້ງຕົ້ນຈາກອາເຊໄປຈົນເຖິງມິກເມທັດ, ຊຶ່ງຢູ່ທາງທິດຕາເວັນອອກຂອງເມືອງຊີເຄມ,
ແລ້ວເຂດແດນໄດ້ອອກໄປທາງທິດໃຕ້ເຖິງຄົນເຫລົ່ານັ້ນທີ່ອາໄສຢູ່ໃກ້ກັບນ້ຳພຸທັບປູອາ.[8](ແຜ່ນດິນທັບປູອາ ເປັນຂອງພວກມານາເຊ,
ແຕ່ເມືອງທັບປູອາເທິງ ຊາຍແດນຂອງພວກມານາເຊເປັນຂອງເຜົ່າເອຟຣາອິມ.)
[9]ຊາຍແດນກໍລົງໄປເຖິງລຳນ້ຳການາ. ເມືອງເຫລົ່ານີ້ຊຶ່ງຢູ່ທາງຕອນໃຕ້ຂອງລຳນ້ຳທ່າມກາງເມືອງຕ່າງໆ ຂອງມານາເຊທີ່ເປັນຂອງເອຟຣາອິມ.
ເຂດແດນຂອງມານາເຊກໍຂຶ້ນໄປທາງເຫນືອຂອງລຳນ້ຳ ແລະ ໄປສິ້ນສຸດທີ່ທະເລ.[10]ແຜ່ນດິນທາງທິດໃຕ້ເປັນຂອງເອຟຣາອິມ, ແລະ
ແຜ່ນດິນທາງທິດເຫນືອເປັນຂອງມານາເຊ; ມີທະເລເປັນຊາຍແດນ. ທາງເຫນືອຕິດດິນແດນອາເຊ ແລະທາງທິດຕາເວັນອອກ, ຕິດອິດຊາຄາ.
[11]ໃນເຂດອິດຊາຄາ ແລະ ໃນອາເຊນັ້ນ, ມານາເຊໄດ້ຍຶດຄອງເມືອງເບັດເຊອານ ແລະ ຫມູ່ບ້ານຮອບໆນັ້ນ, ອິບເລອາມກັບຫມູ່ບ້ານຮອບໆ
ເມືອງນັ້ນ, ແລະ ຊາວເມືອງໂດເຣກັບຫມູ່ບ້ານ ຊາວເມືອງເອນໂດເຣກັບຫມູ່ບ້ານຮອບໆ, ນັ້ນແລະ ຊາວເມືອງ ຕາອານັກກັບຫມູ່ບ້ານຮອບໆນັ້ນ,
ແລະຊາວເມືອງເມກິດໂດກັບຫມູ່ບ້ານຮອບໆນັ້ນ, (ແລະ ເປັນເມືອງທີສາມຄືນາເຟ).
[12]ແຕ່ເຜົ່າມານາເຊກໍຍັງບໍ່ສາມາດຍຶດຄອງເມືອງເຫລົ່ານັ້ນໄດ້, ແລະ ຄົນການາອານຍັງຄົງຢູ່ອາໄສໃນແຜ່ນດິນນັ້ນຢ່າງຕໍ່ເນື່ອງ.
[13]ເມື່ອປະຊາຊົນອິສະຣາເອນເຂັ້ມແຂງຂຶ້ນແລ້ວ, ພວກເຂົາກໍໄດ້ບັງຄັບຄົນການາອານໃຫ້ເຮັດວຽກຫນັກ,
ແຕ່ບໍ່ໄດ້ຂັບໄລ່ພວກເຂົາອອກໄປຢ່າງສິ້ນເຊີງ.
[14]ດັ່ງນັ້ນລູກຫລານຂອງຄົນເຜົ່າໂຢເຊັບ ໄດ້ເວົ້າກັບໂຢຊວຍ, ກ່າວວ່າ, "ເປັນຫຍັງທ່ານຈຶ່ງຈັດສັນທີ່ດິນໃຫ້ເຮົາໄດ້ພຽງສ່ວນດຽວເປັນມໍຣະດົກ,
ໃນເມື່ອເຮົາມີຄົນຫລວງຫລາຍ ແລະ ພຣະຢາເວ, ກໍໄດ້ຊົງອວຍພອນພວກເຮົາມາຕະຫລອດ?"[15]ໂຢຊວຍໄດ້ຕອບພວກເຂົາວ່າ,
"ຖ້າທ່ານມີຄົນຫລວງຫລາຍ, ຈົ່ງເຂົ້າໄປຖາງເອົາປ່າ ທີ່ດິນສຳລັບພວກທ່ານເອງໃນແຜ່ນດິນຂອງຄົນເປຣີຊີ, ແລະ ຄົນເຣຟາອິມ.
ຈົ່ງເຮັດຢ່າງນີ້ໄດ້ເລີຍ, ເນື່ອງຈາກດິນແດນເນີນພູຂອງເອຟຣາອິມນັ້ນນ້ອຍເກີນໄປສຳລັບພວກເຈົ້າ."
[16]ພວກເຊື້ອສາຍຂອງໂຢເຊັບໄດ້ກ່າວວ່າ, "ແດນເນີນພູເຫລົ່ານີ້ກໍບໍ່ພຽງພໍສຳລັບພວກເຮົາ. ແຕ່ຄົນການາອານຜູ້ທີ່ຢູ່ຕາມທົ່ງພຽງມີຣົດຮົບເຫລັກ
ແລະ ທັງພວກທີ່ຢູ່ໃນເບັດເຊອານ ແລະຫມູ່ບ້ານລອບໆ ແລະ ພວກທີ່ຢູ່ໃນຮ່ອມພູຢິດຊະເຣນ".
[17]ແລ້ວໂຢຊວຍຈຶ່ງໄດ້ກ່າວແກ່ເຊື້ອສາຍຂອງໂຢເຊັບຄື - ເອຟຣາອິມ ແລະມານາເຊວ່າ, "ພວກທ່ານທີ່ມີປະຊາຊົນຈຳນວນຫລາຍ, ແລະ
ພວກທ່ານມີກຳລັງເຂັ້ມແຂງ. ພວກທ່ານຈະຕ້ອງບໍ່ໄດ້ມີສ່ວນແບ່ງພຽງສ່ວດຽວຄືດິແດນທີ່ໄດ້ຈັດສັນໃຫ້ພວກທ່ານແລ້ວ.
[18]ດິນແດນເນີນພູກໍຈະເປັນຂອງທ່ານ ເຖິງແມ່ນວ່າເປັນປ່າ ໃຫ້ທ່ານຈົ່ງຖາງໃຫ້ແປນ ແລະຍຶດຄອງໄປສຸດເຂດແດນ.
ທ່ານຈະຂັບໄລ່ພວກການາອານໃຫ້ອອກໄປ, ແມ່ນວ່າພວກເຂົາຈະມີຣົດມ້າເຫລັກ, ແລະ ເຖິງແມ່ນວ່າພວກເຂົາຈະແຂງແຮງກໍຕາມ".


generated on Tue Jun 17 19:01:42 2025

18 1ແລ້ວຊຸມຊົນຂອງປະຊາຊົນອິສະຣາເອນທັງຫມົດ ກໍໄດ້ມາປະຊຸມກັນທີ່ເມືອງຊີໂລ. ພວກເຂົາໄດ້ຕັ້ງເຕັນນັດພົບຂຶ້ນທີ່ນັ້ນ. 2ແລະ
ພວກເຂົາໄດ້ຍຶດຄອງແຜ່ນດິນທີ່ຢູ່ຕໍ່ຫນ້າພວກເຂົາ
ຍັງມີອີກເຈັດເຜົ່າໃນທ່າມກາງປະຊາຊົນອິສະຣາເອນທີ່ຍັງບໍ່ໄດ້ຮັບມອບມໍຣະດົກຂອງເຂົາ.

3ໂຢຊວຍຈຶ່ງໄດ້ກ່າວແກ່ປະຊາຊົນອິສະຣາເອນວ່າ, "ພວກເຈົ້າຈະລໍຖ້າອີກນານປານໃດ?
ທີ່ຈະເຂົ້າໄປໃນແຜ່ນດິນທີ່ພຣະຢາເວພຣະເຈົ້າຂອງບັນພະບູລຸດຂອງພວກເຈົ້າປຣະທານໃຫ້ແກ່ພວກເຈົ້າ,
4ຈົ່ງແຕ່ງຕັ້ງຜູ້ຊາຍສາມຄົນຈາກແຕ່ລະເຜົ່າ ແລະ ຂ້າພະເຈົ້າຈະສົ່ງພວກເຂົາອອກໄປ ພວກເຂົາຈະອອກໄປ ແລະ
ສຳຫລວດແຜ່ນດິນໂດຍລະອຽດ. ພວກເຂົາຈະຂຽນຄຳອະທິບາຍເຖິງແນວເຂດທີ່ດິນມໍຣະດົກຂອງພວກເຂົາ ແລະ
ພວກເຂົາຈະກັບມາຫາຂ້າພະເຈົ້າ.
5ພວກເຂົາຈະແບ່ງທີ່ດິນອອກເປັນເຈັດສ່ວນ. ຄົນຢູດາຈະຍັງຄົງຢູ່ໃນດິນແດນຂອງເຂົາທາງທິດໃຕ້, ແລະ
ຕະກູນຂອງໂຢເຊັບຈະຍັງໃຫ້ຢູ່ໃນດິນແດນຂອງພວກເຂົາທາງທິດເຫນືອ. 6ພວກເຈົ້າຂຽນແນວເຂດທີ່ດິນເປັນເຈັດສ່ວນ
ແລະນຳມາໃຫ້ຂ້າພະເຈົ້າທີ່ນີ້, ຂ້າພະເຈົ້າຈະຈັບສະຫລາກສຳລັບພວກເຈົ້າທີ່ນີ້ຕໍ່ຫນ້າພຣະຢາເວພຣະເຈົ້າຂອງພວກເຮົາ.
7ຄົນເລວີບໍ່ມີສ່ວນແບ່ງໃນທ່າມກາງພວກເຈົ້າ, ເພາະຕຳແຫນ່ງປະໂລຫິດຂອງພຣະຢາເວ, ເປັນມໍຣະດົກຂອງພວກເຂົາ ເຜົ່າກາດ, ເຜົ່າຣູເບັນ,
ແລະ ເຄິ່ງເຜົ່າຂອງມານາເຊກໍໄດ້ຮັບມໍຣະດົກຂອງເຂົາທາງຟາກຕາເວັນອອກຂອງແມ່ນ້ຳຈໍແດນ,
ນີ້ເປັນມໍຣະດົກຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຢາເວ, ໄດ້ມອບໃຫ້ພວກເຂົາແລ້ວ."
8ດັ່ງນັ້ນຜູ້ຊາຍເຫລົ່ານັ້ນຈຶ່ງໄດ້ລຸກຂຶ້ນອອກເດີນທາງໄປ ໂຢຊວຍໄດ້ສັ່ງຄົນເຫລົ່ານັ້ນທີ່ເດີນທາງໄປໃຫ້ຂຽນແນວເຂດເມືອງ ແລະ ໄດ້ກ່າວວ່າ,
"ຈົ່ງເດີນທາງໄປໃຫ້ທົ່ວແຜ່ນດິນ ແລະໃຫ້ຂຽນແນວເຂດທີ່ດິນແລ້ວນຳກັບມາໃຫ້ຂ້າພະເຈົ້າ.
ຂ້າພະເຈົ້າຈະຈັບສະຫລາກໃຫ້ພວກເຈົ້າຕໍ່ຫນ້າພຣະຢາເວ, ທີ່ຊີໂລ." 9ຜູ້ຊາຍເຫລົ່ານັ້ນໄດ້ຈາກໄປ ແລະ ໄດ້ເດີນສຳຫລວດຢ່າງລະອຽດ. ແລະ
ໄດ້ຂຽນຄຳອະທິບາຍລົງໃນມ້ວນຫນັງສືຊື່ເມືອງຕ່າງໆ ໃນເຈັດສ່ວນໃສ່ລາຍຊື່ເມືອງຕ່າງໆໃນແຕ່ລະສ່ວນ,
ແລ້ວພວກເຂົາກໍກັບມາຫາໂຢຊວຍໃນຄ້າຍທີ່ຊີໂຣ.
10ແລ້ວໂຢຊວຍກໍຈັບສະຫລາກໃຫ້ພວກເຂົາຕໍ່ຫນ້າພຣະຢາເວ.
ທີ່ຊີໂຣໃນບ່ອນນັ້ນເອງທີ່ໂຢຊວຍໄດ້ຈັດແບ່ງທີ່ດິນໃຫ້ແກ່ປະຊາຊົນອິສະຣາເອນ, ແລະ ແຕ່ລະເຜົ່າກໍໄດ້ຮັບຕາມສ່ວນແບ່ງຂອງແຜ່ນດິນ.
11ການຈັດສັນທີ່ດິນສຳລັບເຜົ່າເບັນຢາມິນ ກໍໄດ້ຈັດແບ່ງໃຫ້ຕາມຕະກູນຂອງພວກເຂົາ.
ຂອບເຂດດິນແດນທີ່ເປັນສ່ວນຂອງພວກເຂົາຕັ້ງຢູ່ລະຫວ່າງລູກຫລານຂອງຢູດາ ແລະ ລູກຫລານຂອງໂຢເຊັບ.
12ທາງທິດເຫນືອຊາຍແດນຂອງພວກເຂົາເລີ່ມຈາກແມ່ນ້ຳຈໍແດນ ແລະຊາຍແດນກໍຂຶ້ນໄປເຖິງເນີນພູທາງທິດເຫນືອຂອງເຢຣິໂກ,
ແລ້ວຂຶ້ນໄປດິນແດນເນີນພູທາງທິດຕາເວັນຕົກ. ແລ້ວໄປຈົນເຖິງຖິ່ນທຸຣະກັນດານເບັດອາເວນ.
13ຈາກທີ່ນັ້ນຊາຍແດນໄດ້ຜ່ານໄປທາງໃຕ້ໃນທິດທາງໄປຍັງລູເຊ (ສະຖານທີ່ດຽວກັບເບັດເອນ).
ແລ້ວເຂດແດນກໍລົງໄປທາງໃຕ້ເຖິງອາທາໂຣດອັດດາ, ທາງພູເຂົາທີ່ຍາວໄປທາງໃຕ້ເມືອງເບັດໂຮໂຣນ. 14ແລ້ວຊາຍແດນນີ້ກໍອອກໄປທິດທາງຫນຶ່ງ:
ໄປທາງດ້ານຕາເວັນຕົກ ໂຄ້ງໄປທາງທິດໃຕ້ມຸ້ງໄປທາງພູເຂົາກົງກັນຂ້າມກັບເບັດໂຮໂຣນ, ເຂດແດນນີ້ໄປສິ້ນສຸດລົງທີ່ກີຣິອາດບາອານ
(ນັ້ນຄືກີຣິອາດເຢອາຣິມ), ເມືອງທີ່ເປັນຂອງເຜົ່າຢູດາ ນີ້ເປັນການແບ່ງເຂດແດນທາງດ້ານຕາເວັນຕົກ.
15ສ່ວນທາງດ້ານໃຕ້ນັ້ນເລີ່ມຕົ້ນຂ້າງນອກເມືອງ ກີຣິອາດເຢອາຣິມ.
ຊາຍແດນກໍເລີ່ມຈາກເອຟໂຣນໄປທາງຕາເວັນຕົກເຖິງນ້ຳພຸຂອງລຳນ້ຳແຫ່ງເນັບໂທອາ.
16ແລ້ວຊາຍແດນກໍລົງໄປເຖິງເຂດພູເຂົາຊຶ່ງຢູ່ກົງກັນຂ້າມກັບຮ່ອມພູ ເບັນຮິນໂນມຊຶ່ງຢູ່ທາງເຫນືອສຸດຂອງຮ່ອມພູເຣຟາອີມ,
ແລ້ວກໍລົງໄປທີ່ຮ່ອມພູຮິນໂນມ, ທາງໃຕ້ສັນພູຂອງຄົນເຢບຸດ ແລະ ຕໍ່ໄປເຖິງເອນໂຣເກນ.
17ແລ້ວກໍໂຄ້ງໄປທາງທິດເຫນືອຈົນໄປເຖິງເອນເຊເມດ, ຈາກທີ່ນັ້ນກໍໄປຍັງເກລີໂລດຊຶ່ງຢູ່ກົງກັນຂ້າມກັບທາງຂຶ້ນເຂົາຊື່ອາດູມມີມ,
ແລ້ວລົງໄປຍັງໂງ່ນຫີນຂອງໂບຮານລູກຊາຍຂອງຣູເບັນ. 18ແລ້ວຜ່ານໄປທາງເຫນືອໄປເຖິງສັນພູຂອງເບັດອາຣາບາ ແລະ ລົງໄປເຖິງອາຣາບາ.
19ແລ້ວຊາຍແດນກໍຜ່ານໄປທາງເຫນືອສັນພູເບັດໂຮລະກາ
ຊາຍແດນໄປສຸດລົງທີ່ອ່າວດ້ານເຫນືອຂອງທະເລເກືອທີ່ປາຍດ້ານໃຕ້ຂອງແມ່ນ້ຳຈໍແດນ. ນີ້ເປັນຊາຍແດນດ້ານໃຕ້.
20ແມ່ນ້ຳຈໍແດນເປັນຊາຍແດນທາງທິດຕາເວັນອອກ. ນີ້ເປັນມໍຣະດົກຂອງລູກຫລານເຜົ່າເບັນຢາມິນທີ່ໄດ້ມອບໃຫ້ຕາມຕະກູນຂອງພວກເຂົາ,
ມີຊາຍແດນຕໍ່ຊາຍແດນລ້ອມຮອບກັນທັງຫມົດ.
21ບັດນີ້ເມືອງຕ່າງໆຂອງເຜົ່າເບັນຢາມິນຕາມຕະກູນຂອງພວກເຂົາຄື: ເຢຣິໂກ, ເບັດໂຮກະລາ, ເອເມັກເກຊິດ, 22ເບັດອາລະບາ, ເຊມາຣາອິມ,
ເບັດເອນ, 23ອັບວິມ, ປາຣາ, ໂອຟະຣາ, 24ເກຟາອຳໂມນີ, ໂອຟະນີ, ແລະເກບາມີສິບສອງເມືອງລວມທັງຫມູ່ບ້ານຮອບໆ.
25ຍັງມີອີກຫລາຍເມືອງຂອງກິເບໂອນ, ຣາມາ, ເບເອໂຣດ, 26ມິຊະປາ, ເຄຟີຣາ, ໂມຊາ, 27ເຣເຄມ, ອີຣະເປເອນ, ທາຣະລາ, 28ເສລາ, ຮາເອເລັບ,
ເຢບູ, (ເມືອງດຽວກັບເຢຣູຊາເລັມ), ກິເບອາ ແລະ ກີຣິອາດ, ເຢອາຣິມ. ລວມທັງຫມົດມີ 14 ເມືອງລວມທັງຫມູ່ບ້ານຕ່າງໆຂອງພວກເຂົາ.
ນີ້ເປັນມໍຣະດົກຂອງເບັນຢາມິນຕາມຕະກູນຂອງພວກເຂົາ.


generated on Tue Jun 17 19:01:42 2025

19 [1]ສະຫລາກທີສອງໄດ້ຕົກເປັນຂອງເຜົ່າຊີເມໂອນ ແລະ ໄດ້ຖືກຈັດສັນໃຫ້ແຕ່ລະຕະກູນຂອງພວກເຂົາ.
ມໍຣະດົກຂອງພວກເຂົາຢູ່ກາງມໍຣະດົກທີ່ເປັນຂອງເຜົ່າຢູດາ.

[2]ພວກເຂົາມີເມືອງເຫລົ່ານີ້ເປັນມໍຣະດົກຄື ເບຍເອເຊບາ, ເຊບາ, ໂມລາດາ,[3]ຮາຊາຊູອານ, ບາລາ, ເອເຊມ,[4]ເອນໂທລັດ, ເບທູນ, ໂຮມາ.
[5]ຊີເມໂອນ, ແລະ ມີສິກລາກດ້ວຍ, ເບັດມັກກາໂບດ, ຮາຊາສຸສາ,[6]ເບັດເລບາໂອດແລະຊາຣູເຮນ. ເຫລົ່ານີ້ເປັນສິບສາມເມືອງ
ລວມທັງຫມູ່ບ້ານທັງຫລາຍຂອງເມືອງເຫລົ່ານັ້ນດ້ວຍ.[7]ຊີເມໂອນ ເມືອງ ອາອິນ, ຣິມໂມນ, ເອເທ, ອາຊານ,
ລວມເປັນສີ່ເມືອງລວມທັງຫມູ່ບ້ານທັງຫລາຍຂອງເມືອງເຫລົ່ານັ້ນດ້ວຍ.
[8]ເຫລົ່ານີ້ຄືຫມູ່ບ້ານຕ່າງໆລອບເມືອງທີ່ໄກອອກໄປເຖິງບາອາລາດເບເອ (ທີ່ດຽວກັບລາມາໃນເນເກບ). ນີ້ເປັນມໍຣະດົກຂອງເຜົ່າຊີເມໂອນ,
ທີ່ໄດ້ມອບໃຫ້ຕາມຕະກູນຂອງພວກເຂົາ.[9]ມໍຣະດົກຂອງເຜົ່າຊີເມໂອນມີສ່ວນຫນຶ່ງຢູ່ໃນເຜົ່າຂອງຢູດາ.
ເພາະວ່າແຜ່ນດິນທີ່ໄດ້ຈັດສັນໃຫ້ເຜົ່າຢູດານັ້ນໃຫຍ່ຫລາຍເກີນໄປສໍາລັບພວກເຂົາ,
ເຜົ່າຂອງຊີເມໂອນຈຶ່ງໄດ້ຮັບມໍຣະດົກຢູ່ສ່ວນເຄິ່ງຫນຶ່ງຂອງພວກເຂົາ.
[10]ສະຫລາກທີສາມໄດ້ຕົກເປັນຂອງເຜົ່າເຊບູໂລນ, ແລະ ໄດ້ມອບໃຫ້ແກ່ຕະກູນຂອງພວກເຂົາ. ດິນແດນທີ່ເປັນມໍຣະດົກຂອງເຂົາເລີ່ມທີ່ສາຣິດ.
[11]ຊາຍແດນຂອງພວກເຂົາໄດ້ຂຶ້ນໄປທາງຕາເວັນຕົກໄປສູ່ເມືອງມາຣາລາ ແລະ ໄດ້ໄປເຖິງເດບເບດເຊດ;
ແລ້ວກໍຂະຫຍາຍໄປເຖິງຫ້ວຍນ້ຳທີ່ຢູ່ກົງກັນຂ້າມກັບໂຢກເນອາມ.
[12]ຈາກສາຣິດຊາຍແດນລ້ຽວໄປທາງຕາເວັນອອກແລະໄປເຖິງເຂດແດນກີສະໂລດຕາໂບເຣ.
ຈາກທີ່ນັ້ນກໍຜ່ານໄປທາງທິດຕາເວັນອອກເຖິງດາເບຣັດແລະກໍຂຶ້ນໄປເຖິງຢາເຟຍ.[13]ຈາກທີ່ນັ້ນກໍໄປທາງທິດຕາເວັນອອກໄປເຖິງກັດເຮເຟ, ແລະ
ກໍເຖິງເອັດຄາຊິນ, ຕໍ່ໄປເຖິງຣິມໂມນ ແລະ ລ້ຽວກັບມາຫາເນອາ.
[14]ເຂດແດນກໍໄດ້ລ້ຽວໄປທາງເຫນືອເຖິງຮັນນາໂທນ, ແລະ ສິ້ນສຸດທີ່ຮ່ອມພູອິບທາເອນ,[15]ພື້ນທີ່ນີ້ລວມທັງເມືອງຕ່າງໆຂອງຂັບຕາດ, ນາຫະລານ,
ຊິມໂຣນ, ອິດາລາ, ແລະເບັດເລເຮັມ. ມີເມືອງຕ່າງໆລວມສິບສອງເມືອງເຫລົ່ານັ້ນ.[16]ນີ້ເປັນມໍຣະດົກຂອງເຜົ່າເສບູໂລນ,
ທີ່ໄດ້ມອບໃຫ້ຕະກູນຂອງພວກເຂົາ, ເມືອງຕ່າງໆລວມທັງຫມູ່ບ້ານທັງຫລາຍຂອງເມືອງເຫລົ່ານັ້ນ.
[17]ສະຫລາກທີສີ່ໄດ້ຕົກເປັນຂອງ ເຜົ່າອິດຊາຄາ, ແລະ ກໍໄດ້ມອບໃຫ້ຕະກູນຂອງພວກເຂົາ.[18]ດິນແດນຂອງພວກເຂົາລວມ. ຢິດເຣເອນ,
ເຄສູນໂລດ, ຊູເນມ,[19]ຮາຟາຣາອິມ, ຊີໂອນ, ແລະ ອານາຮາຣັດ.
[20]ລວມທັງຮັບບິດ, ກີຊີໂອນ, ເອເບດ,[21]ເຣເມັດ, ເອນກັນນິມ, ເອນຫັດດາ, ແລະ ເບັດປັດເຊດອີກດ້ວຍ.
[22]ດິນແດນຂອງພວກເຂົາຍັງຕິດເຂດແດນທາໂບ, ຊາຫະຊູມາ ແລະ ເບັດເຊເມດ ແລະ ສິ້ນສຸດທີ່ແມ່ນ້ຳຈໍແດນ ລວມເປັນ ສິບຫົກເມືອງ.
ລວມທັງຫມູ່ບ້ານຕ່າງໆຂອງເມືອງນັ້ນ.
[23]ນີ້ເປັນມໍຣະດົກຂອງເຜົ່າ ຄົນອິດຊາຄາ, ທີ່ໄດ້ມອບໃຫ້ລູກຫລານຂອງພວກເຂົາ ຄືເມືອງຕ່າງໆ - ແລະ
ຫມູ່ບ້ານຕ່າງໆຂອງເມືອງເຫລົ່ານັ້ນດ້ວຍ.
[24]ສະຫລາກທີຫ້າໄດ້ຕົກເປັນຂອງເຜົ່າຄົນອາເຊທີ່ໄດ້ມອບໃຫ້ລູກຫລານຂອງພວກເຂົາ.[25]ດິນແດນຂອງພວກເຂົາລວມເມືອງເຮນກາດ, ຮາລີ,
ເບເຕນ, ອັກຊັບ,[26]ອັນລຳເມເຫລັກ, ອາມາດ, ແລະ ມິດຊັນ. ທາງທິດຕາເວັນຕົກຂອງເຂດແດນຂະຫຍາຍອອກໄປເຖິງຄາເມນ ແລະ
ຊີໂຫລິບນາດ.
[27]ແລ້ວລ້ຽວໄປທາງທິດຕາເວັນອອກເຖິງເບດດາໂກນແລະໄປເຖິງເສບູໂລນ, ແລະ ໄປເຖິງຮ່ອມພູອິບທາເອນ, ໄປທາງເຫນືອເຖິງເບດເອເມກ ແລະ
ເນອີເອນ. ແລ້ວໄປເຖິງຄາບູນທາງເຫນືອ.[28]ແລ້ວໄປເຖິງເອໂບນ, ເຣໂຫບ, ຮຳໂມນ, ແລະ ການາ, ໄປເຖິງຊີໂດນເມືອງໃຫຍ່ກວ່າ.
[29]ເຂດແດນລ້ຽວກັບມາເຖິງຣາມາ, ແລະ ໄປເຖິງເມືອງທີ່ມີປ້ອມປ້ອງກັນ. ແລະ ເຂດແດນກໍອ້ອມເຖິງໂຮສະ ແລະ ສິ້ນສຸດລົງທີ່ທະເລ
ໃນບໍຣິເວນອັກຊິບ.[30]ອູມມາ, ອາເຟກ ແລະເຣໂຮບ. ນີ້ຄືຊາວສອງເມືອງລວມທັງຫມູ່ບ້ານຂອງເມືອງເຫລົ່ານັ້ນ.
[31]ນີ້ເປັນມໍຣະດົກຂອງເຜົ່າອາເຊ, ທີ່ໄດ້ມອບໃຫ້ລູກຫລານຂອງພວກເຂົາ ເມືອງຕ່າງໆລວມທັງຫມູ່ບ້ານທັງຫລາຍຂອງເມືອງເຫລົ່ານັ້ນນັ້ນດ້ວຍ.
[32]ສະຫລາກທີຫົກຕົກເປັນຂອງເຜົ່ານັບທາລີ, ແລະ ໄດ້ມອບໃຫ້ລູກຫລານຂອງພວກເຂົາ.
[33]ເຂດແດນຂອງພວກເຂົາເລີ່ມຈາກເຮເລັບຈາກຕົ້ນໂອກທີ່ສານັນນິມ, ທີ່ອາດາມີເນເຂບ, ແລະ ຢັບເນເອນ, ໄກອອກໄປເຖິງລັດຄູມ.
ແລະສິ້ນສຸດທີ່ແມ່ນ້ຳຈໍແດນ.[34]ເຂດແດນກໍອ້ອມໄປທາງຕາເວັນຕົກເຖິງອັດຊະໂນດທາໂບ, ແລະ ໄປເຖິງຮຸກໂກກ; ໄປຈຸກັບເຊບູໂລນ, ທາງທິດໃຕ້
ແລະ ໄປເຖິງອາເຊທາງທິດຕາເວັນຕົກ ແລະ ຢູດາທາງທິດຕາເວັນອອກທີ່ແມ່ນ້ຳຈໍແດນ.
[35]ເມືອງຕ່າງໆທີ່ມີກຳແພງລ້ອມຮອບຄື ຊິດດິມ, ເຊເຣ, ຮາມມັດ, ຣັກກັດ, ກິນເນເຣດ,[36]ອາດາມາ, ຣາມາ, ຮາໂຊ,[37]ເກເດັດ, ເອັດເຣອີ,
ເອນຮາໂຊ.
[38]ຍັງມີເມືອງຢີໂລນ, ມິກດາເລນ, ໂຮເຣັມ, ເບັດທານາດ, ແລະ ເບັດເຊເມດ, ແລະ ມີເມືອງຕ່າງໆລວມສິບເກົ້າເມືອງ
ລວມທັງຫມູ່ບ້ານຕ່າງໆຂອງເມືອງເຫລົ່ານັ້ນໂດຍຮອບ.[39]ນີ້ເປັນມໍຣະດົກຂອງເຜົ່ານັບທາລີ,
ທີ່ໄດ້ມອບໃຫ້ລູກຫລານຂອງພວກເຂົາເມືອງຕ່າງໆລວມທັງຫມູ່ບ້ານຕ່າງໆຂອງເມືອງເຫລົ່ານັ້ນດ້ວຍ.
[40]ສະຫລາກທີເຈັດໄດ້ຕົກເປັນຂອງເຜົ່າດານ, ແລະ ໄດ້ມອບໃຫ້ລູກຫລານຂອງພວກເຂົາ.[41]ດິນແດນທີ່ເປັນມໍຣະດົກຂອງພວກເຂົາ ຄື ໂຊຣາ,
ເອັດທາໂອນ, ອີຣະເຊເມດ.[42]ຊາອາລັບບິນ, ໄອຢາໂລນ, ອິດລາ,
[43]ລວມທັງເອໂລນ, ທິມນາ, ເອັກໂຣນ,[44]ເອນເຕເກ, ກິບເບໂລນ, ບາອາລາດ,[45]ເຢຮຸດ, ເບເນເບຣາດ, ກາດຣິມໂມນ,[46]ເມຢາຣະໂກນ, ແລະ
ຣັກໂກນຍາວໄປກັບດິນແດນທີ່ຂ້າມໄປຈາກຢັບຟາ.
[47]ເມື່ອດິນແດນຂອງຊົນເຜົ່າດານໄດ້ຖືກສູນເສຍໃຫ້ແກ່ພວກເຂົາ, ດານໄດ້ໂຈມຕີເມືອງເລເຊມ, ສູ້ກັບພວກເຂົາ, ແລະ ຢຶດເມືອງ.
ພວກເຂົາໄດ້ຂ້າທຸກຄົນດ້ວຍດາບຢຶດຊັບສິນ ແລະ ໄດ້ປະກາດເປັນເມືອງຂອງຕົນທີ່ນັ້ນ. ພວກເຂົາໄດ້ຕັ້ງຊື່ເລເຊມໃຫມ່ວ່າ
ດານຕາມບັນພະບຸຣຸດຂອງພວກເຂົາ.[48]ນີ້ເປັນມໍຣະດົກຂອງເຜົ່າດານທີ່ໄດ້ມອບໃຫ້ລູກຫລານຂອງພວກເຂົາ,
ເມືອງຕ່າງໆລວມທັງຫມູ່ບ້ານທັງຫລາຍຂອງເມືອງເຫລົ່ານັ້ນ.


generated on Tue Jun 17 19:01:42 2025

[49]ເມື່ອພວກເຂົາໄດ້ແບ່ງດິນແດນສ່ວນຕ່າງໆ ຂອງແຜ່ນດິນນັ້ນເປັນມໍຣະດົກເສັດສິ້ນແລ້ວ,
ປະຊາຊົນອິສະຣາເອນກໍໄດ້ມອບສ່ວນມໍຣະດົກໃນຫມູ່ຂອງພວກເຂົາໃຫ້ແກ່ໂຢຊວຍລູກຊາຍຂອງນູນ.[50]ຕາມຄໍາສັ່ງຂອງພຣະຢາເວ,
ພວກເຂົາກໍໄດ້ມອບເມືອງທີ່ເຂົາຂໍໄວ້ໃຫ້ແກ່ເຂົາຄື ເມືອງທິມນາດເສຣາ, ໃນດິນແດນເນີນພູຂອງເອຟຣາອິມ,
ເຂົາໄດ້ສ້າງເມືອງຂຶ້ນອີກຄັ້ງໃຫມ່ແລະອາໄສຢູ່ທີ່ນັ້ນ.
[51]ນີ້ເປັນມໍຣະດົກທີ່ເອເລອາຊາປະໂຣຫິດ, ໂຢຊວຍລູກຊາຍຂອງນູນ ແລະ ຜູ້ນໍາເຜົ່າຕ່າງໆຂອງຄອບຄົວທັງຫລາຍ
ຂອງບັນພະບຸຣຸດຂອງພວກເຂົາໃນປະຊາຊົນອິສະຣາເອນ, ໄດ້ຈັດສັນກັນໂດຍການຈັບສະຫລາກທີ່ຊີໂລ, ຕໍ່ຫນ້າພຣະຢາເວ,
ທີ່ທາງເຂົ້າຂອງເຕັນນັດພົບ. ດັ່ງນັ້ນພວກເຂົາຈຶ່ງເສັດສິ້ນການຈັດສັນທີ່ດິນ.

 generated on Tue Jun 17 19:01:42 2025

20 [1]ແລ້ວພຣະຢາເວ, ໄດ້ກ່າວກັບໂຢຊວຍວ່າ.[2]"ຈົ່ງກ່າວແກປະຊາຊົນອິສະຣາເອນວ່າ
'ຈົ່ງກຳນົດເມືອງລີ້ພັຍໄວ້ຊຶ່ງເຮົາໄດ້ເວົ້າກັບພວກເຈົ້າທາງໂມເຊແລ້ວນັ້ນ.[3]ຈົ່ງເຮັດຢ່າງນີ້ເພື່ອໃຫ້ຄົນໃດໆ ທີ່ໄດ້ຂ້າຄົນໂດຍບໍ່ເຈດຕະນາ
ສາມາດໄປທີ່ນັ້ນໄດ້. ເມືອງເຫລົ່ານີ້ຈະໄດ້ເປັນທີ່ລີ້ພັຍຈາກໃຜກໍຕາມ ທີ່ຫາທາງແກ້ແຄ້ນແທນເລືອດຂອງບຸກຄົນນັ້ນທີ່ໄດ້ຖືກຂ້າ.

[4]ເຂົາຈະຫນີໄປຍັງເມືອງເຫລົ່ານັ້ນ ເມືອງໃດເມືອງຫນຶ່ງ ແລະ ຈະຢືນຢູ່ທີ່ທາງເຂົ້າປະຕູເມືອງແລະ
ອະທິບາຍເລື່ອງຂອງຕົນໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນ. ແລ້ວພວກເຂົາຈະນຳເຂົາເຂົ້າໄປໃນເມືອງ ແລະ
ໃຫ້ສະຖານທີ່ສຳລັບເຂົາອາໄສທ່າມກາງພວກເຂົາ.
[5]ຖ້າຫນຶ່ງຄົນໃນພວກເຂົາຈະພະຍາຍາມແກ້ແຄ້ນແທນເລືອດ ຂອງບຸກຄົນຜູ້ໄດ້ຖືກຂ້າ,
ແລ້ວປະຊາຊົນຂອງເມືອງຈະຕ້ອງບໍ່ມອບຄົນນັ້ນທີ່ໄດ້ຂ້າເຂົາແກ່ເຈົ້າຫນ້າທີ່ເຫລົ່ານັ້ນ,
ພວກເຂົາຈະຕ້ອງບໍ່ເຮັດຢ່າງນີ້ເພາະວ່າເຂົາໄດ້ຂ້າເພື່ອນບ້ານຂອງເຂົາໂດຍບໍ່ໄດ້ເຈຕະນາ. ແລະ ບໍ່ແມ່ນຍ້ອນຄວາມຄຽດແຄ້ນແຕ່ຢ່າງໃດ.
[6]ເຂົາຈະຕ້ອງອາໄສຢູ່ໃນເມືອງນັ້ນຈົນກວ່າເຂົາຈະໄດ້ຢືນຕໍ່ຫນ້າການປະຊຸມເພື່ອການພິພາກສາ
ຈົນກວ່າຜູ້ທີ່ເຮັດຫນ້າທີ່ມະຫາປະໂລຫິດໃນເວລານັ້ນຈະເຖິງແກ່ຄວາມຕາຍ. ແລ້ວຄົນນັ້ນທີ່ໄດ້ຂ້າບຸກຄົນໂດຍອຸປະຕິເຫດ
ອາດຈະໄດ້ກັບໄປຍັງເມືອງຂອງຕົນ ແລະ ໄປບ້ານຂອງຕົນ, ໄປຍັງເມືອງທີ່ເຂົາຈາກມານັ້ນໄດ້.'"
[7]ດັ່ງນັ້ນພວກອິສະຣາເອນຈຶ່ງໄດ້ເລືອກເມືອງເກເດັດໃນຄາລີເລໃນດິນແດນເນີນພູຂອງເຜົ່ານັບທາລີ, ແລະ
ຊີເຄມໃນດິນແດນຮ່ອມພູເອຟຣາອິມແລະກີເລອາດອາກບາ (ເມືອງດຽວກັບເຮັບໂລນ).[8]ໃນດິນແດນຮ່ອມພູຂອງຢູດາ.
ທາງຟາກແມ່ນ້ຳຈໍແດນທິດຕາເວັນອອກຂອງເຢຣີໂກ ພວກເຂົາໄດ້ເລືອກເມືອງເບເຊໃນຖິ່ນແຫ້ງແລ້ງກັນດານເທິງພູພຽງ ຈາກເຜົ່າຣູເບັນ; ຄື
ເມືອງຣາໂມດໃນກີເລອາດ, ຈາກເຜົ່າກາດ; ແລະເມືອງໂກລານແຫ່ງບາຊານ, ຈາກເຜົ່າມານາເຊ.
[9]ເມືອງເຫລົ່ານີ້ເປັນເມືອງທີ່ໄດ້ຄັດເລືອກໄວ້ສຳລັບປະຊາຊົນອິສະຣາເອນທັງຫມົດ ແລະສຳລັບຄົນຕ່າງດ້າວທີ່ອາໄສຢູ່ທ່າມກາງພວກເຂົາ
ດັ່ງນັ້ນຖ້າໃຜທີ່ໄດ້ຂ້າຄົນໂດຍບໍ່ເຈຕະນາ ສາມາດຫນີໄປທີ່ນັ້ນເພື່ອຄວາມປອດພັຍໄດ້
ບຸກຄົນນີ້ຈະບໍ່ຕ້ອງຕາຍດ້ວຍມືຂອງຄົນນັ້ນທີ່ຕ້ອງການແກ້ແຄ້ນແທນເລືອດທີ່ຕົກ, ຈົນກວ່າຄົນທີ່ຖືກກ່າວຫາຈະໄດ້ຢືນຕໍ່ຫນ້າທີ່ປະຊຸມເສຍກ່ອນ.


generated on Tue Jun 17 19:01:42 2025

21 [1]ຂະນະນັ້ນພວກຫົວຫນ້າຕະກູນຕ່າງໆ ຂອງຄົນເລວີໄດ້ມາຫາເອເລອາຊາປະໂລຫິດ, ໂຢຊວຍລູກຊາຍຂອງນູນ,
ແລະບັນດາຫົວຫນ້າຂອງຄອບຄົວຂອງບັນພະບຸຣຸດຂອງປະຊາຊົນອິສະຣາເອນ.
[2]ພວກເຂົາໄດ້ກ່າວແກ່ຄົນເຫລົ່ານັ້ນທີ່ເມືອງຊີໂລໃນແຜ່ນດິນຂອງການາອານ,"ພຣະຢາເວ, ໄດ້ຊົງສັ່ງທ່ານທັງຫລາຍໂດຍຜ່ານທາງໂມເຊວ່າ
ໃຫ້ມອບເມືອງຕ່າງໆແກ່ພວກເຮົາເພື່ອຈະໄດ້ອາໄສຢູ່, ພ້ອມທັງທົ່ງຫຍ້າສຳລັບຝູງສັດລ້ຽງຂອງພວກເຮົາດ້ວຍ."

[3]ດັ່ງນັ້ນຕາມຄຳສັ່ງຂອງພຣະຢາເວ, ປະຊາຊົນອິສະຣາເອນຈຶ່ງໄດ້ມອບເມືອງ, ທົ່ງຫຍ້າຈາກມໍຣະດົກຂອງພວກເຂົາ, ໃຫ້ແກ່ຄົນເລວີ ດັ່ງຕໍ່ໄປນີ້.
[4]ການຈັບສະຫລາກສຳລັບຕະກູນໂກຮາດໄດ້ຜົນອອກມາເປັນດັ່ງນີ້: ບັນດາປະໂລຫິດ-ຊຶ່ງເປັນລູກຫລານຂອງອາໂຣນຜູ້ທີ່ມາຈາກຄົນເລວີ -
ໄດ້ຮັບເມືອງຕ່າງໆ ສິບສາມເມືອງທີ່ໄດ້ມາຈາກເຜົ່າຢູດາ, ໄດ້ມາຈາກເຜົ່າຊີເມໂອນ, ແລະໄດ້ມາຈາກເຜົ່າເບັນຢາມິນ.
[5]ລູກຫລານທີ່ເຫລືອຢູ່ຂອງຄົນໂກຮາດໄດ້ຮັບເມືອງສິບເມືອງໂດຍການຈັບສະຫລາກຈາກຕະກູນຕ່າງໆ ຂອງເຜົ່າເອຟຣາອິມ, ຈາກເຜົ່າດານ,
ແລະຈາກເຄິ່ງເຜົ່າຂອງມານາເຊ.
[6]ແລ້ວປະຊາຊົນທີ່ສືບເຊື້ອສາຍມາຈາກເກໂຊນ, ໂດຍການຈັບສະຫລາກກໍໄດ້ຮັບ, ຣາລີສິບສາມເມືອງຈາກຕະກູນຕ່າງໆຂອງເຜົ່າອິດຊາຄາ,
ເຜົ່າອາເຊ, ເຜົ່າເນັບທາລີ, ແລະຈາກເຄິ່ງເຜົ່າຂອງມານາເຊໃນບາຊານ.[7]ປະຊາຊົນຜູ້ທີ່ເປັນລູກຫລານຂອງເມຣາລີໄດ້ຮັບ ສິບສອງເມືອງ
ຈາກເຜົ່າຣູເບັນ, ເຜົ່າກາດ, ແລະເຜົ່າເຊບູໂລນ.
[8]ດັ່ງນັ້ນປະຊາຊົນອິສະຣາເອນໄດ້ມອບເມືອງຕ່າງໆ, ເຫລົ່ານີ້ໂດຍການຈັບສະຫລາກ (ລວມທັງທົ່ງຫຍ້າຂອງພວກເຂົາ) ໃຫ້ແກ່ຄົນເລວີ,
ຕາມທີ່ພຣະຢາເວໄດ້ຊົງສັ່ງໄວ້ໂດຍຜ່ານທາງໂມເຊ.[9]ຈາກເຜົ່າຢູດາແລະເຜົ່າຊີເມໂອນ, ພວກເຂົາໄດ້ຈັດສັນແຜ່ນດິນຕາມຊື່ເມືອງຕ່າງໆ
ນີ້ຄືລາຍຊື່ເມືອງ.[10]ເມືອງເຫລົ່ານີ້ໄດ້ມອບໃຫ້ແກ່ລູກຫລານຂອງອາໂຣນ, ຜູ້ຢູ່ທ່າມກາງຕະກູນຂອງໂກຮາດ,
ຕະກູນຫນຶ່ງຊຶ່ງເປັນຄົນເລວີເພາະສະຫລາກທຳອິດໄດ້ຕົກເປັນຂອງພວກເຂົາກ່ອນ.
[11]ພວກອິສະຣາເອນ ໃຫ້ເມືອງກີເລອາດ ອາກບາແກ່ພວກເຂົາ (ອາກບາເປັນພໍ່ຂອງອານາກ),
ຄືບ່ອນດຽວກັບເມືອງເຮັບໂລນຢູ່ໃນເຂດພູດອຍຂອງຢູດາ, ລວມທັງທົ່ງຫຍ້າລອບເມືອງນັ້ນດ້ວຍ.[12]ແຕ່ທົ່ງນາຂອງເມືອງແລະຫມູ່ບ້ານຕ່າງໆ
ໂດຍຮອບເມືອງນີ້ໄດ້ຍົກໃຫ້ແກ່ກາເລັບລູກຊາຍຂອງເຢຟູນເນ, ເປັນກຳມະສິດແລ້ວ.
[13]ພວກເຂົາໄດ້ໃຫ້ເມືອງເຮັບໂລນພ້ອມດ້ວຍທົ່ງຫຍ້າແກ່ລູກຫລານຂອງອາໂລນປະໂລຫິດ-
ຊຶ່ງເປັນເມືອງລີ້ພັຍສຳລັບຜູໃດກໍຕາມທີ່ໄດ້ຂ້າຜູ້ອື່ນໂດຍບໍ່ເຈດຕະນາ-ແລະເມືອງລິບນາພ້ອມທົ່ງຫຍ້າ.[14]ເມືອງຢັດທີພ້ອມທົ່ງຫຍ້າ,
ແລະເມືອງເອຊະເທໂມພ້ອມທົ່ງຫຍ້າ.[15]ພວກເຂົາໄດ້ໃຫ້ເມືອງໂຮໂລນພ້ອມດ້ວຍທົ່ງຫຍ້າ, ເມືອງເດບີພ້ອມດ້ວຍທົ່ງຫຍ້າ,
[16]ເມືອງອາອິນພ້ອມທົ່ງຫຍ້າ, ເມືອງຢຸດຕາພ້ອມທົ່ງຫຍ້າ, ເມືອງເບັດເຊເມດພ້ອມທົ່ງຫຍ້າ, ລວມເປັນເກົ້າເມືອງທີ່ໄດ້ມອບໃຫ້ຈາກສອງເຜົ່ານີ້.
[17]ຈາກເຜົ່າເບັນຢາມິນໄດ້ມອບເມືອງກີເບໂອນພ້ອມທົ່ງຫຍ້າ, ເມືອງເກບາພ້ອມທົ່ງຫຍ້າ,[18]ເມືອງອານາທົດພ້ອມທົ່ງຫຍ້າ,
ເມືອງອານໂມນພ້ອມນອກເມືອງ-ລວມສີ່ເມືອງ.[19]ເມືອງຕ່າງໆທີ່ໄດ້ມອບໃຫ້ແກ່ບັນດາປະໂລຫິດ, ທີ່ເປັນລູກຫລານຂອງອາໂຣນ,
ລວມທັງຫມົດສິບສາມເມືອງ, ພ້ອມກັບທົ່ງຫຍ້າ.
[20]ສ່ວນທີ່ເຫລືອຂອງຄອບຄົວຂອງຄົນໂກອາດ-ຄົນເລວີເຫລົ່ານັ້ນທີ່ເປັນຕະກູນຂອງໂກອາດ-
ພວກເຂົາມີມີເມືອງຕ່າງໆທີ່ພວກເຂົາໄດ້ຮັບມາຈາກເຜົ່າເອຟຣາອິມໂດຍການຈັບສະຫລາກ.
[21]ເມືອງທີ່ພວກເຂົາໄດ້ຮັບຄືເມືອງຊີເຄມພ້ອມກັບທົ່ງຫຍ້າໃນແຖບເນີນພູຂອງເອຟຣາອິມ-
ເມືອງຂອງຜູ້ລີ້ພັຍສຳລັບຄົນທີ່ຂ້າບຸກຄົນໂດຍບໍ່ເຈຕະນາ- ເມືອງເກເຊພ້ອມທົ່ງຫຍ້າ,[22]ເມືອງກິບຊາອິມພ້ອມທົ່ງຫຍ້າ,
ເມືອງເບັດໂຮໂຣນພ້ອມທົ່ງຫຍ້າ-ລວມທັງຫມົດເປັນສີ່ເມືອງ.
[23]ຈາກການເຜົ່າດານ, ຈາກການເຮັດຄວາມສະອາດຂອງໂກອາດມອບເມືອງເອນເທເກພ້ອມທົ່ງຫຍ້າ, ເມືອງກິບເບໂທນພ້ອມທົ່ງຫຍ້າ,
[24]ໄອຢາໂລນພ້ອມທົ່ງຫຍ້າ, ແລະກາດຣິມໂມນພ້ອມທົ່ງຫຍ້າ-ລວມສີ່ເມືອງດ້ວຍກັນ.
[25]ຈາກເຄິ່ງເຜົ່າຂອງມານັດເຊ, ຕະກູນຂອງໂກຮາດໄດ້ຮັບເມືອງທາອານັກພ້ອມທົ່ງຫຍ້າ ແລະກາດຣິມໂມນພ້ອມທົ່ງຫຍ້າ-ລວມເປັນສອງເມືອງ.
[26]ມີເມືອງສິບເມືອງໃນທັງຫມົດສຳລັບຄົນໃນຕະກູນໂກຮາດທີ່ເຫລືອຢູ່, ພ້ອມທົ່ງຫຍ້າຂອງເມືອງເຫລົ່ານັ້ນ.
[27]ຈາກເຄິ່ງເຜົ່າຂອງຄົນມານັດເຊ ແກ່ຄົນເກໂຊນ ຄົນເຫລົ່ານີ້ເປັນຕະກູນຫນຶ່ງຂອງຄົນເລວີ,
ແລະພວກເຂົາໄດ້ໃຫ້ໂກລານໃນບາຊານພ້ອມທົ່ງຫຍ້າ, ເມືອງຜູ້ລີ້ພັຍສຳລັບຜູ້ທີ່ຂ້າຜູ້ອື່ນໂດຍບໍ່ເຈຕະນາ
ແລະມີເມືອງເບເອັດຊະເຕຣາພ້ອມທົ່ງຫຍ້າ ລວມທັງຫມົດສອງເມືອງ.
[28]ແກ່ຕະກູນເກໂຊນພວກເຂົາໄດ້ມອບ ກີຊີໂອນຈາກເຜົ່າອິດຊາຄາ, ພ້ອມທົ່ງຫຍ້າ, ດາເບລັດພ້ອມທັງທົ່ງຫຍ້າ,[29]ຢາຣະມຸດພ້ອມທົ່ງຫຍ້າ,
ແລະເອັນກັນນີມພ້ອມທົ່ງຫຍ້າ-ລວມສີ່ເມືອງ.[30]ຈາກເຜົ່າອາເຊ, ພວກເຂົາໄດ້ໃຫ້ ເມືອງມີຊັນພ້ອມທົ່ງຫຍ້າ, ອັບໂດນພ້ອມທົ່ງຫຍ້າ,
[31]ເມືອງເຮນກາດພ້ອມທົ່ງຫຍ້າ, ເມືອງເຣໂຮບພ້ອມທົ່ງຫຍ້າ, ແລະເມືອງລີໂຮບພ້ອມທົ່ງຫຍ້າ-ລວມສີ່ເມືອງທັງຫມົດ.
[32]ຈາກເຜົ່າເນັບທາລີ, ພວກເຂົາໄດ້ໃຫ້ຕະກູນເກໂຊນ ເມືອງເກເດັດໃນກາລີເລພ້ອມທົ່ງຫຍ້າ-
ເປັນເມືອງລີ້ພັຍສຳລັບຜູ້ທີ່ໄດ້ຂ້າຜູ້ອື່ນໂດຍບໍ່ເຈຕະນາ; ເມືອງຮາມໂມດໂດເຣພ້ອມທົ່ງຫຍ້າ, ແລະເມືອງກາກຕານພ້ອມທົ່ງຫຍ້າ-
ລວມທັງຫມົດສາມເມືອງ.[33]ມີເມືອງຕ່າງໆສິບສາມເມືອງທີ່ເປັນຄົນເກໂຊນ, ລວມທັງທົ່ງຫຍ້າຂອງພວກເຂົາ.
[34]ແກ່ພວກເຜົ່າເລວີທີ່ເຫລືອ - ຕະກູນເມຣາຣີ - ໄດ້ຮັບມອບຂອງເຜົ່າເຊບູໂລນ: ມີເມືອງໂຢກເນອາມພ້ອມທົ່ງຫຍ້າ, ເມືອງກາກຕາພ້ອມທົ່ງຫຍ້າ,
[35]ເມືອງດິມນາພ້ອມທົ່ງຫຍ້າ, ແລະເມືອງນາຮາລາດພ້ອມທົ່ງຫຍ້າ - ລວມທັງຫມົດສີ່ເມືອງ.
[36]ແກ່ຕະກູນເມຣາຣີໄດ້ຮັບຈາກເຜົ່າຣູເບັນຄື: ເມືອງເບເຊພ້ອມທົ່ງຫຍ້າ, ເມືອງຢາຫັບພ້ອມທົ່ງຫຍ້າ,[37]ເມືອງເກເດໂມດພ້ອມທົ່ງຫຍ້າ,
ແລະເມືອງເມຟາອາດພ້ອມທົ່ງຫຍ້າ - ລວມສີ່ເມືອງ.[38]ຈາກເຜົ່າກາດມີເມືອງຣາໂມດໃນກີເລອາດພ້ອມທົ່ງຫຍ້າ -
ເມືອງລີ້ພັຍສຳລັບໃຜກໍຕາມທີ່ຂ້າຜູ້ອື່ນໂດຍບໍ່ເຈຕະນາ - ແລະເມືອງມະຫານາອິມພ້ອມທົ່ງຫຍ້າ.

[39]ຕະກູນຂອງຄົນເມຣາຣີໄດ້ຮັບເມືອງເຮັດຊະໂບນພ້ອມທົ່ງຫຍ້າ, ແລະເມືອງຢາເຊພ້ອມທົ່ງຫຍ້າ, ລວມທັງຫມົດສີ່ເມືອງ.[40]ທັງຫມົດນີ້
ເມືອງຕ່າງໆທີ່ເປັນຂອງຫລາຍຕະກູນຂອງຄົນເມຣາຣີ, ຊຶ່ງມາຈາກຕະກູນຂອງເຜົ່າຄົນເລວີ -
ມີສິບສອງເມືອງທີ່ໄດ້ມອບໃຫ້ພວກເຂົາໂດຍການຈັບສະຫລາກ.
[41]ເມືອງຕ່າງໆຂອງຄົນເລວີ ຊຶ່ງຢູ່ທ່າມກາງກຳມະສິດຂອງປະຊາຊົນອິສະຣາເອນນັ້ນລວມທັງຫມົດມີ ສີ່ສິບແປດເມືອງ, ພ້ອມທົ່ງຫຍ້າທຸກເມືອງ.
[42]ເມືອງເຫລົ່ານີ້ແຕ່ລະເມືອງມີທົ່ງຫຍ້າລ້ອມຮອບທຸກເມືອງ. ໂດຍວິທີນີ້ເຮັດກັບເມືອງເຫລົ່ານີ້ທຸກເມືອງ.
[43]ດັ່ງນັ້ນພຣະຢາເວໄດ້ປຣະທານແຜ່ນດິນໃຫ້ອິສະຣາເອນຕາມທີ່ພຣະອົງໄດ້ຊົງສັນຍາວ່າຈະໃຫ້ແກ່ບັນພະບຸຣຸດຂອງພວກເຂົາ.
ພວກອິສະຣາເອນໄດ້ຍຶດແລ້ວກໍເຂົ້າໄປຕັ້ງຖິ່ນຖານຢູ່ທີ່ນັ້ນ.[44]ແລ້ວພຣະຢາເວໄດ້ປຣະທານໃຫ້ພວກເຂົາມີຄວາມສະຫງົບຢູ່ທຸກດ້ານ,
ດັ່ງທີ່ພຣະອົງຊົງສັນຍາໄວ້ກັບບັນພະບຸຣຸດຂອງພວກເຂົາ. ບໍ່ມີສັດຕຣູຂອງພວກເຂົາຈັກຄົນດຽວທີ່ຕໍ່ສູ້ພວກເຂົາໄດ້.
ພຣະຢາເວໄດ້ຊົງມອບສັດຕຣູຂອງພວກເຂົາໃຫ້ຢູ່ໃນກຳມືຂອງເຂົາທັງຫມົດ.
[45]ບໍ່ມີຈັກສິ່ງທ່າມກາງພຣະສັນຍາອັນປະເສີດທຸກຢ່າງຊຶ່ງພຣະຢາເວຊົງສັນຍາຕໍ່ປະຊາຊົນອິສະຣາເອນຈະຫລົ້ມເຫລວຈາກເປັນຈິງ.
ທຸກສິ່ງເປັນຄວາມຈິງທັງສິ້ນ.

 generated on Tue Jun 17 19:01:42 2025

22 [1]ໃນເວລານັ້ນໂຢຊວຍໄດ້ເອີ້ນຄົນຣູເບັນ, ຄົນກາດ, ແລະຄົນມານາເຊເຄິ່ງເຜົ່າມາ.[2]ເພິ່ນໄດ້ກ່າວກັບພວກເຂົາວ່າ,
"ເຈົ້າທັງຫລາຍໄດ້ເຮັດທຸກຢ່າງຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ສັ່ງໃຫ້ເຮັດ.
ພວກເຈົ້າໄດ້ເຊື່ອຟັງສຽງຂອງຂ້າພະເຈົ້າທີ່ໄດ້ອອກຄຳສັ່ງພວກເຈົ້າ.[3]ພວກເຈົ້າບໍ່ໄດ້ປະຖິ້ມພີ່ນ້ອງຂອງເຈົ້າເປັນເວລານານມາແລ້ວ,
ຈົນເຖິງເວລານີ້, ແລະເຈົ້າເຮັດຫນ້າທີ່ສຳເລັດຕາມທີ່ກຳນົດໄວ້ໂດຍພຣະບັນຍັດຂອງພຣະຢາເວພຣະເຈົ້າຂອງເຈົ້າ,

[4]ດຽວນີ້ພຣະຢາເວພຣະເຈົ້າຂອງເຈົ້າໄດ້ໂຜດໃຫ້ພີ່ນ້ອງຂອງເຈົ້າຢຸດພັກແລ້ວ, ດັ່ງທີ່ພຣະອົງຊົງສັນຍາໄວ້ກັບພວກເຂົາ.
ດັ່ງນັ້ນພວກເຈົ້າຈົ່ງກັບບ້ານຂອງເຈົ້າເຖີດໃນແຜ່ນດິນຂອງເຈົ້າ,
ຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ມອບໃຫ້ພວກເຈົ້າທີ່ອີກຟັງຫນຶ່ງຂອງແມ່ນ້ຳຈໍແດນນັ້ນ.
[5]ພຽງແຕ່ຈົ່ງຣະວັງໃຫ້ດີທີ່ຈະປະຕິບັດກົດບັນຍັດແລະກົດຫມາຍທີ່ໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ສັ່ງເຈົ້າໄວ້ແລ້ວ,
ໃຫ້ຮັກພຣະຢາເວພຣະເຈົ້າຂອງເຈົ້າ, ໃຫ້ເດີນໃນທຸກທາງຂອງພຣະອົງ, ແລະໃຫ້ບົວຣະບັດຮັບໃຊ້ພຣະອົງ,
ຕິດສະນິດກັບພຣະອົງແລະນະມັດສະການພຣະອົງດ້ວຍສຸດໃຈແລະດ້ວຍສຸດຈິດຂອງພວກເຈົ້າ,[6]ດັ່ງນັ້ນໂຢຊວຍໄດ້ອວຍພອນພວກເຂົາ
ແລະໄດ້ສົ່ງພວກເຂົາກັບໄປ, ແລະພວກເຂົາກໍໄດ້ກັບໄປທີ່ເຕັນຂອງພວກເຂົາ.
[7]ດຽວນີ້ຫນຶ່ງເຄິ່ງຂອງເຜົ່າມານັດເຊ ໂມເຊໄດ້ມອບກຳມະສິດໃຫ້ເຂົາໃນບາຊານ, ແຕ່ອີກເຄິ່ງເຜົ່ານັ້ນ
ໂຢຊວຍໄດ້ມອບກຳມະສິດໃຫ້ພວກເຂົາທີ່ໃກ້ຄຽງກັບພີ່ນ້ອງຂອງພວກເຂົາ ໃນແຜ່ນດິນພາກຕາເວັນຕົກຂອງແມ່ນ້ຳຈໍແດນ.
ໂຢຊວຍໄດ້ສົ່ງພວກເຂົາກັບໄປທີ່ເຕັນຂອງພວກເຂົາ; ເພິ່ນໄດ້ອວຍພອນພວກເຂົາ[8]ແລະໄດ້ກ່າວຕໍ່ພວກເຂົາວ່າ,
"ຈົ່ງກັບໄປເຕັນຂອງພວກເຈົ້າພ້ອມກັບເງິນຈຳນວນຫລາຍ, ແລະຝູງສັດຈຳນວນຫລາຍ, ພ້ອມດ້ວຍເງິນແລະຄຳ, ທອງ, ເຫລັກ,
ແລະເສື້ອຜ້າອີກຫລາຍຢ່າງ, ຈົ່ງແບ່ງປັນສິ່ງທີ່ຢຶດມາ. ໄດ້ຈາກເຫລົ່າສັດຕຣູຂອງເຈົ້າໃຫ້ພີ່ນ້ອງຂອງເຈົ້າ".
[9]ດັ່ງນັ້ນລູກຫລານຂອງຄົນຣູເບັນ, ລູກຫລານຂອງຄົນກາດ, ແລະເຄິ່ງເຜົ່າຂອງຄົນມານາເຊຈຶ່ງໄດ້ກັບບ້ານ,
ໄດ້ຈາກປະຊາຊົນອິສະຣາເອນທີ່ຊີໂລ, ຊຶ່ງຢູ່ໃນແຜ່ນດິນການາອານ.
ພວກເຂົາໄດ້ຈາກໄປຍັງແຜ່ນດິນກີເລອາດໄປຍັງແຜ່ນດິນຂອງພວກເຂົາເອງ, ຊຶ່ງພວກເຂົາໄດ້ເປັນກຳມະສິດ,
ໃນການເຊື່ອຟັງຕາມຄຳສັ່ງຂອງພຣະຢາເວ, ຜ່ານທາງມືຂອງໂມເຊ.
[10]ເມື່ອພວກເຂົາມາເຖິງແມ່ນ້ຳຈໍແດນໃນແຜ່ນດິນການາອານ, ຄົນຣູເບັນແລະຄົນກາດແລະ
ຄົນມານາເຊເຄິ່ງເຜົ່າໄດ້ສ້າງແທ່ນບູຊາໃກ້ແມ່ນ້ຳຈໍແດນ, ເປັນແທ່ນຂະຫນາດໃຫຍ່ທີ່ເບິ່ງເດັ່ນ.[11]ປະຊາຊົນອິສາຣາເອນໄດ້ຍິນແລະເວົ້າວ່າ,
"ຈົ່ງເບິ່ງແມ! ພວກປະຊາຊົນຄົນຣູເບັນ, ຄົນກາດ, ແລະຄົນມານາເຊເຄິ່ງເຜົ່າ ໄດ້ສ້າງແທ່ນບູຊາທີ່ຫນ້າແຜ່ນດິນຂອງການາອານ, ທີ່ເກລີໂລດ,
ໃນດິນແດນໃກ້ແມ່ນ້ຳຈໍແດນ, ເທິງຟັງທີ່ເປັນຂອງປະຊາຊົນອິສະຣາເອນ."
[12]ເມື່ອປະຊາຊົນອິສະຣາເອນໄດ້ຍິນເຊັ່ນນັ້ນ, ຊຸມນຸມຊົນອິສະຣາເອນທັງຫມົດ ກໍໄປລວມກັນທີ່ເມືອງຊີໂລ ເພື່ອຈະຂຶ້ນໄປເຮັດເສິກກັບພວກເຂົາ.
[13]ແລ້ວປະຊາຊົນອິສະຣາເອນໄດ້ສົ່ງພວກຜູ້ສື່ຂ່າວໄປຫາ ຄົນຣູເບັນ, ຄົນກາດ, ແລະຄົນມານາເຊເຄິ່ງເຜົ່າ, ໃນແຜ່ນດິນກີເລອາດ.
ພວກເຂົາໄດ້ສົ່ງຟີເນຮາລູກຊາຍຂອງເອເລອາຊາ, ທີ່ເປັນປະໂລຫິດ.[14]ແລະພ້ອມດ້ວຍຜູ້ນຳສິບຄົນ,
ຫນຶ່ງຄົນຈາກແຕ່ລະຄອບຄົວດັ້ງເດີມຂອງອິສະຣາເອນ, ແລະທຸກຄົນໃນພວກເຂົາເປັນຫົວຫນ້າຕະກູນໃນປະຊາຊົນອິສະຣາເອນ.
[15]ພວກເຂົາໄດ້ມາຫາປະຊາຊົນ ຄົນຣູເບັນ, ຄົນກາດ, ແລະເຄິ່ງຫນຶ່ງຂອງເຜົ່າມານາເຊ, ໃນແຜ່ນດິນຂອງກີເລອາດແລະໄດ້ເວົ້າກັບພວກເຂົາ:
[16]"ຊຸມນຸມຊົນທັງຫມົດຂອງພຣະຢາເວກ່າວດັ່ງນີ້ວ່າ, ' ພວກເຈົ້າໄດ້ເຮັດການທໍຣະຍົດຕໍ່ພຣະເຈົ້າຂອງອິສະຣາເອນ, ເຊັ່ນນີ້ໄດ້ຢ່າງໃດ
ໃນການທີ່ພວກເຈົ້າໄດ້ຫັນກັບຈາກການຕິດຕາມພຣະຢາເວ, ໂດຍໄດ້ສ້າງແທ່ນບູຊາສຳລັບພວກທ່ານໃນວັນນີ້. ໃນການທໍຣະຍົດຕໍ່ພຣະຢາເວ?
[17]ບາບຊຶ່ງເຮົາໄດ້ເຮັດທີ່ເມືອງເປອໍນັ້ນຍັງບໍ່ພໍບໍ? ຈົນເຖິງທຸກວັນນີ້ເຮົາຍັງບໍ່ອາດຊໍາຣະຕົວຂອງເຮົາໃຫ້ສະອາດໄດ້.
ເພາະບາບນັ້ນໄດ້ເຮັດໃຫ້ເກີດພັຍພິບັດແກ່ຊຸມນຸມຊົນຂອງພຣະຢາເວ.[18]ພວກເຈົ້າຈະຫັນໄປເສຍຈາກການຕິດຕາມພຣະຢາເວໃນວັນນີ້ອີກບໍ?
ຖ້າພວກເຈົ້າທໍຣະຍົດຕໍ່ພຣະຢາເວວັນນີ້, ມື້ອື່ນພຣະອົງກໍຈະໂກດຮ້າຍຕໍ່ຊຸມນຸມຊົນຂອງອິສະຣາເອນທັງຫມົດ.
[19]ຖ້າແຜ່ນດິນໃນກຳມະສິດຂອງເຈົ້າເປັນມົນທິນ, ແລ້ວເຈົ້າຄວນຂ້ວາມໄປຍັງແຜ່ນດິນທີ່ຫໍເຕັນສັກສິດຂອງພຣະຢາເວໄດ້ຕັ້ງຢູ່
ແລະຖືກຳມະສິດສຳລັບພວກເຈົ້າທ່າມກາງພວກເຮົາເຖີດ. ຂໍພຽງແຕ່ຢ່າກະບົດຕໍ່ພຣະຢາເວ,
ຫລືກະບົດຕໍ່ເຮົາໂດຍການສ້າງແທ່ນບູຊາສຳລັບຕົວເຈົ້າ ນອກຈາກແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງພວກເຮົາ.
[20]ອາການລູກຊາຍຂອງເຊຣາ ໄດ້ທຳລາຍຄວາມເຊື່ອໃນເລື່ອງຂອງສິ່ງເຫລົ່ານັ້ນທີ່ຕ້ອງສະຫງວນໄວ້ສຳລັບພຣະເຈົ້າບໍ່ແມ່ນບໍ?
ຄວາມໂກດຮ້າຍບໍ່ໄດ້ຕົກຕົກຢູ່ກັບປະຊາຊົນອິສະຣາເອນທັງຫມົດບໍ? ຊາຍຄົນນັ້ນບໍ່ໄດ້ຕາຍຄົນດຽວໃນການເຮັດຜິດຂອງເຂົາ.'"
[21]ຂະນະນັ້ນຄົນຣູເບັນ, ຄົນກາດ, ແລະຄົນມານາເຊເຄິ່ງເຜົ່າໄດ້ຕອບຜູ້ນຳຂອງຕະກູນອິສະຣາເອນວ່າ:[22]"ພຣະຢາເວພຣະເຈົ້າຜູ້ຊົງຣິດ,
ພຣະຢາເວ! ພຣະເຈົ້າຜູ້ຊົງຣິດ - ພຣະອົງຊົງຮູ້, ແລະຊົງໃຫ້ອິສະຣາເອນຮູ້ດ້ວຍເຖີດ! ຖ້ານີ້ເປັນການກະບົດ ຫລືທໍຣະຍົດຄວາມ
ເຊື່ອຕໍ່ພຣະຢາເວ,ຂໍຢ່າຊົງໄວ້ຊີວິດພວກເຮົາໃນວັນ
ນີ້[23]ສຳລັບການທີ່ໄດ້ສ້າງແທ່ນບູຊາເພື່ອທີ່ພວກເຮົາຈະໄດ້ຫັນໄປຈາກການຕິດຕາມພຣະຢາເວ,
ຖ້າພວກເຮົາສ້າງແທ່ນບູຊານັ້ນເພື່ອຖວາຍເຄື່ອງເຜົາບູຊາ, ຫລືເພື່ອຖວາຍບູຊາພືດຜົນຫລືຖວາຍເພື່ອຄວາມສາມັກຄີທັມ
ດັ່ງນັ້ນຂໍໃຫ້ພຣະຢາເວ, ໃຫ້ພວກເຮົາຮັບຜິດເຖີດ.
[24]ແຕ່ບໍ່ເລີຍ ພວກເຮົາໄດ້ສ້າງໄວ້ເພາະຢ້ານວ່າໃນເວລາຕໍ່ໄປພາຍຫນ້າລູກຫລານຂອງທ່ານອາດຈະກ່າວຕໍ່ລູກຫລານຂອງພວກເຮົາວ່າ,
'ພວກເຈົ້າມີສ່ວນກ່ຽວຂ້ອງອັນໃດກັບພຣະຢາເວພຣະເຈົ້າຂອງອິສະຣາເອນ?
[25]ເພາະວ່າພຣະຢາເວ ຊົງກຳນົດໃຫ້ແມ່ນ້ຳຈໍແດນເປັນຊາຍແດນລະຫວ່າງພວກເຮົາກັບພວກເຈົ້າ. ພວກເຈົ້າປະຊາຊົນຣູເບັນ,
ແລະປະຊາຊົນກາດ, ພວກເຈົ້າບໍ່ມີສ່ວນໃນພຣະຢາເວ.'ດັ່ງນັ້ນເດັກນ້ອຍຂອງເຈົ້າ ເຮັດໃຫ້ເດັກນ້ອຍຈຳຕ້ອງນະມັສະການພຣະຢາເວ.
[26]ດັ່ງນັ້ນເຮົາຈຶ່ງກ່າວວ່າ, 'ໃຫ້ເຮົາສ້າງແທ່ນບູຊາຕອນນີ້ເຖີດ, ບໍ່ແມ່ນເພື່ອເຄື່ອງເຜົາບູຊາ ບໍ່ແມ່ນສຳລັບການຖວາຍເຄື່ອງບູຊາໃດໆ.
[27]ແຕ່ເພື່ອເປັນພະຍານລະຫວ່າງພວກເຮົາກັບພວກເຈົ້າ, ແລະລະຫວ່າງຄົນຊົ່ວອາຍຸຕໍ່ຈາກພວກເຮົາ,

 generated on Tue Jun 17 19:01:42 2025

ວ່າເຮົາຈະເຮັດການບົວຣະບັດພຣະຢາເວຕໍ່ຫນ້າຂອງພຣະອົງ, ດ້ວຍເຄື່ອງເຜົາບູຊາແລະດ້ວຍການຖວາຍສາມັກຄີທໍາ,
ເພື່ອລູກຫລານຂອງພວກທ່ານຈະບໍ່ກ່າວແກ່ລູກຫລານຂອງພວກເຮົາໃນເວລາຂ້າງຫນ້າວ່າ, "ພວກເຈົ້າບໍ່ມີສ່ວນໃນພຣະຢາເວ."'
28ດັ່ງນັ້ນ ເຮົາໄດ້ກ່າວວ່າ, 'ຖ້າມີການເວົ້າເຊັ່ນນີ້ກັບເຮົາ ຫລືກັບລູກຫລານຂອງເຮົາໃນວັນຂ້າງຫນ້າ ເຮົາກໍຈະກ່າວວ່າ, "ເບິ່ງແມ!
ນັ້ນເປັນແທ່ນບູຊາຄ້າຍຄືກັບແທ່ນບູຊາແຫ່ງພຣະຢາເວ, ຊຶ່ງບັນພະບຸຣຸດຂອງເຮົາເຮັດໄວ້, ບໍ່ແມ່ນເພື່ອຖວາຍເຄື່ອງເຜົາບູຊາ,
ຫລືບໍ່ແມ່ນເພື່ອຖວາຍບູຊາໃດໆ, ແຕ່ເພື່ອເປັນພະຍານລະຫວ່າງເຮົາກັບພວກເຈົ້າ.
29ຂໍໃຫ້ເລື່ອງນີ້ຫ່າງຈາກເຮົາເຖີດທີ່ເຮົາຈະທໍຣະຍົດຕໍ່ພຣະຢາເວ, ແລະວັນນີ້ຫັນຈາກການຕິດຕາມພຣະຢາເວ,
ໂດຍການສ້າງແທ່ນບູຊາອື່ນສໍາລັບເຄື່ອງເຜົາບູຊາ ຖວາຍບູຊາພືດຜົນ ຫລືຖວາຍເພື່ອຄວາມສາມັກຄີທໍາ
ນອກຈາກແທ່ນບູຊາຂອງພຣະຢາເວພຣະເຈົ້າ, ຂອງເຮົາຊຶ່ງຕັ້ງຢູ່ທີ່ຫນ້າຫໍເຕັນສັກສິດຂອງພຣະອົງ.'"
30ເມື່ອຟີເນຮາປະໂລຫິດ ແລະພວກຜູ້ນໍາຂອງປະຊາຊົນ, ນັ້ນແມ່ນ, ອິສະຣາເອນ ຄືບັນດາຫົວຫນ້າຕະກູນຕ່າງໆ
ຂອງອິສະຣາເອນທີ່ຢູ່ດ້ວຍກັນກັບເຂົານັ້ນ, ໄດ້ຍິນຖ້ອຍຄໍາທີ່ປະຊາຊົນເຜົ່າຣູເບັນ, ປະຊາຊົນເຜົ່າກາດ,
ແລະປະຊາຊົນເຜົ່າມານາເຊກ່າວກໍເຫັນດີໃນສາຍຕາຂອງພວກເຂົາ.31ຟີເນຮາ
ລູກຊາຍຂອງເອເລອາຊາປະໂລຫິດຈຶ່ງໄດ້ກ່າວຕໍ່ປະຊາຊົນເຜົ່າຣູເບັນ, ເຜົ່າກາດ, ແລະເຜົ່າມານາເຊວ່າ,
"ໃນວັນນີ້ເຮົາຮູ້ແລ້ວວ່າພຣະຢາເວສະຖິດທ່າມກາງພວກເຮົາ, ເພາະວ່າພວກເຈົ້າບໍ່ໄດ້ເຮັດການທໍຣະຍົດຕໍ່ພຣະອົງ,
ບັດນີ້ພວກເຈົ້າໄດ້ຊ່ວຍກູ້ປະຊາຊົນອິສະຣາເອນພົ້ນຈາກການລົງໂທດຂອງພຣະຢາເວ."
32ແລ້ວຟີເນຮາລູກຊາຍຂອງເອເລອາຊາປະໂລຫິດ, ແລະພວກຜູ້ນໍາກໍກັບຈາກຄົນຣູເບັນ, ແລະຄົນກາດ, ຈາກແຜ່ນດິນກີເລອາດ
ໄປຍັງແຜ່ນດິນການາອານ, ໄປຫາປະຊາຊົນອິສະຣາເອນ, ແລະນໍາເອົາຄໍາເວົ້າໄປຫາເຂົາ.
33ລາຍງານຂອງພວກເຂົາດີໃນສາຍຕາຂອງປະຊາຊົນອິສະຣາເອນກໍສັນຣະເສີນພຣະເຈົ້າ, ແລະບໍ່ເວົ້າເຖິງເລື່ອງທີ່ຈະເຮັດສົງຄາມກັບຄົນຣູເບັນ,
ແລະຄົນກາດ, ເພື່ອທໍາລາຍແຜ່ນດິນຊຶ່ງພວກເຂົາໄດ້ອາໄສຢູ່ນັ້ນ.
34ຄົນຣູເບັນ ແລະຄົນກາດເອີ້ນແທ່ນນັ້ນວ່າ "ພະຍານ"ເພາະພວກເຂົາໄດ້ກ່າວວ່າ,
"ແທ່ນນັ້ນເປັນພະຍານລະຫວ່າງເຮົາວ່າພຣະຢາເວຊົງເປັນພຣະເຈົ້າ."


generated on Tue Jun 17 19:01:42 2025

## 23

1ພາຍຫລັງອີກຫລາຍປີ, ເມື່ອພຣະຢາເວ,
ໄດ້ປຣະທານຄວາມສະຫງົບແກ່ອິສະຣາເອນຈາກພວກສັດຕຣູທັງຫມົດຂອງພວກເຂົາທີ່ລ້ອມຮອບພວກເຂົາ,
ແລະໂຢຊວຍກໍເຖົ້າແລະມີອາຍຸຫລາຍ. 2ໂຢຊວຍກໍໄດ້ເອີ້ນປະຊາຊົນອິສະຣາເອນທັງຫມົດ - ທັງພວກຜູ້ໃຫຍ່, ແລະພວກຜູ້ນຳ,
ພວກຜູ້ພິພາກສາ, ແລະບັນດາເຈົ້າຫນ້າທີ່ - ແລະເພິ່ນໄດ້ກ່າວແກ່ພວກເຂົາວ່າ, "ຂ້າພະເຈົ້າເຖົ້າແກ່ຫລາຍແລ້ວ.
3ພວກເຈົ້າໄດ້ເຫັນທຸກສິ່ງຊຶ່ງພຣະຢາເວພຣະເຈົ້າ, ຂອງພວກເຈົ້າໄດ້ຊົງກະທຳຕໍ່ປະຊາຊາດເຫລົ່ານີ້ທັງຫມົດເພື່ອເຫັນແກ່ພວກເຈົ້າ
ເພາະພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ຊົງສູ້ຮົບເພື່ອພວກເຈົ້າ.

4ຈົ່ງເບິ່ງເຖີດ! ຂ້າພະເຈົ້າໄດ້ມອບປະຊາຊາດຕ່າງໆ ທີ່ເຫລືອຢູ່ເພື່ອໄດ້ຢຶດຄອງໃຫ້ເປັນມໍຣະດົກແກ່ເຜົ່າຕ່າງໆຂອງພວກເຈົ້າ,
ລວມທັງປະຊາຊາດທັງຫລາຍຊຶ່ງຂ້າພະເຈົ້າໄດ້ທຳລາຍເສຍ, ຕັ້ງແຕ່ແມ່ນ້ຳຈໍແດນຈົນເຖິງທະເລໃຫຍ່ທາງທິດຕາເວັນຕົກ.
5ພຣະຢາເວພຣະເຈົ້າຂອງເຈົ້າ ພຣະອົງຈະຊົງຝັກດັນພວກເຂົາອອກໄປໃຫ້ພົ້ນສາຍຕາຂອງພວກເຈົ້າ. ພຣະອົງຈະຊົງຢຶດແຜ່ນດິນຂອງພວກເຂົາ
ແລະພວກເຈົ້າຈະໄດ້ຢຶດຄອງແຜ່ນດິນຂອງພວກເຂົາ, ດັ່ງທີ່ພຣະຢາເວພຣະເຈົ້າຂອງເຈົ້າໄດ້ຊົງສັນຍາໄວ້ຕໍ່ພວກເຈົ້າ.
6ດັ່ງນັ້ນຈົ່ງເຂັ້ມແຂງໄວ້ໃຫ້ຫລາຍ, ເພື່ອທີ່ພວກເຈົ້າຈະຮັກສາແລະເຮັດຕາມທຸກສິ່ງຊຶ່ງຂຽນໄວ້ໃນຫນັງສືກົດບັນຍັດຂອງໂມເຊ, ຢ່າຫັນເຫໄປ
ບໍ່ວ່າທາງຂວາຫລືທາງຊ້າຍກໍຕາມ. 7ເພື່ອພວກເຈົ້າຈະບໍ່ເຂົ້າສ່ວນກັບປະຊາຊາດເຫລົ່ານີ້ທີ່ຍັງຄົງເຫລືອຢູ່ທ່າມກາງພວກເຈົ້າ
ຫລືຮ້ອງອອກຊື່ພະຕ່າງໆຂອງພວກເຂົາ, ຫລືສາບານໃນນາມພະເຫລົ່ານັ້ນ, ຫລືນະມັດສະການຂາບໄຫວ້ມັນດ້ວຍ.
8ແຕ່ພວກເຈົ້າຈົ່ງຢຶດຫມັ້ນຢູ່ກັບພຣະຢາເວພຣະເຈົ້າ, ຂອງພວກເຈົ້າດັ່ງທີ່ໄດ້ເຮັດຢູ່ຈົນເຖິງທຸກວັນນີ້.
9ເພາະພຣະຢາເວໄດ້ຊົງຂັບໄລ່ປະຊາຊາດທີ່ໃຫຍ່ໂຕ, ເຂັ້ມແຂງອອກໄປຕໍ່ຫນ້າພວກເຈົ້າ,
ສ່ວນພວກເຈົ້າເອງກໍຍັງບໍ່ມີໃຜທີ່ຈະສາມາດຕໍ່ສູ້ພວກເຈົ້າໄດ້ຈົນເຖິງວັນນີ້. 10ພຽງຄົນດຽວໃນພວກເຈົ້າກໍຈະຂັບໄລ່ພັນຄົນໃຫ້ຫນີໄປໄດ້.
ເພາະວ່າພຣະຢາເວພຣະເຈົ້າ, ຂອງພວກເຈົ້າ ຄືຜູ້ນັ້ນທີ່ຊົງສູ້ຮົບເພື່ອພວກເຈົ້າ, ດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ແລ້ວ.
11ຈົ່ງໃຫ້ຄວາມສົນໃຈເປັນພິເສດ, ເພື່ອທີ່ພວກເຈົ້າຈະຮັກພຣະຢາເວພຣະເຈົ້າຂອງພວກເຈົ້າ.
12ແຕ່ຖ້າພວກເຈົ້າຫັນກັບແລະຜູກພັນກັບຄົນທີ່ມີຊີວິດລອດຂອງປະຊາຊາດເຫລົ່ານີ້ທີ່ເຫລືອຢູ່ ທ່າມກາງພວກເຈົ້າຫລືຖ້າພວກເຈົ້າ
ຫລືຖ້າພວກເຈົ້າມາກັບພວກເຂົາແລະພວກເຂົາມາກັບເຈົ້າ, 13ແລ້ວໃຫ້ພວກເຈົ້າຮູ້ແນ່ວ່າ ພຣະຢາເວພຣະເຈົ້າ,
ຂອງພວກເຈົ້າຈະບໍ່ຊົງຂັບໄລ່ຊົນຊາດເຫລົ່ານີ້ອອກໄປໃຫ້ພົ້ນຈາກພວກເຈົ້າອີກ ແຕ່ພວກເຂົາຈະເປັນບ້ວງແລະເປັນກັບດັກສຳລັບພວກເຈົ້າ.
ເປັນແສ້ຕີຫລັງພວກເຈົ້າ, ເປັນຫນາມ ແທງຕາຂອງພວກເຈົ້າ ຈົນກວ່າພວກເຈົ້າຈະພິນາດໄປຈາກແຜ່ນດິນທີ່ດີນີ້,
ຊຶ່ງພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ປຣະທານໃຫ້ແກ່ພວກເຈົ້າ.
14ບັດນີ້ ຂ້າພະເຈົ້າກຳລັງໄປຕາມທາງຂອງໂລກນີ້, ແລະພວກເຈົ້າໄດ້ຮູ້ແກ່ໃຈແລ້ວວ່າ
ບໍ່ມີຄຳເວົ້າແມ່ນແຕ່ຄຳດຽວທີ່ໄດ້ຫລົ້ມເຫລວຈາກຄວາມເປັນຈິງ
ໃນສິ່ງດີທຸກສິ່ງຊຶ່ງພຣະຢາເວພຣະເຈົ້າຂອງເຈົ້າໄດ້ຊົງສັນຍາກ່ຽວກັບພວກເຈົ້າ. ສິ່ງເຫລົ່ານີ້ທັງຫມົດໄດ້ສຳເລັດສຳລັບພວກເຈົ້າ.
ບໍ່ມີຈັກສິ່ງດຽວທີ່ຫລົ້ມເຫລວ. 15ແຕ່ສິ່ງດີຊຶ່ງພຣະຢາເວພຣະເຈົ້າ, ຂອງພວກເຈົ້າທີ່ໄດ້ສັນຍາກັບພວກເຈົ້າໄດ້ສຳເລັດທຸກຢ່າງ, ດັ່ງນັ້ນພຣະຢາເວ,
ກໍຈະຊົງນຳສິ່ງຮ້າຍທຸກຢ່າງມາເຖິງເຈົ້າຈົນກວ່າພຣະອົງຈະໄດ້ຊົງທຳລາຍພວກເຈົ້າຈາກແຜ່ນດິນອັນດີນີ້ ຊຶ່ງພຣະຢາເວພຣະເຈົ້າ,
ຂອງພວກເຈົ້າໄດ້ປຣະທານແກ່ພວກເຈົ້າ.
16ຖ້າພວກເຈົ້າບໍ່ຮັກສາພັນທະສັນຍາແຫ່ງພຣະຢາເວພຣະເຈົ້າ, ຂອງພວກເຈົ້າທີ່ພຣະອົງໄດ້ສັ່ງພວກເຈົ້າໄວ້.
ຖ້າພວກເຈົ້າໄປຮັບໃຊ້ແລະຂາບລົງນະມັສະການພະອື່ນເຫລົ່ານັ້ນແລ້ວ, ຄວາມໂກດຮ້າຍຂອງພຣະຢາເວຈະພຸ່ງຂຶ້ນຕໍ່ພວກເຈົ້າ,
ແລະພວກເຈົ້າຈະພິນາດໄປຢ່າງວ່ອງໄວ ຈາກແຜ່ນດິນທີ່ດີຊຶ່ງພຣະອົງໄດ້ປຣະທານແກ່ພວກເຈົ້າ."


generated on Tue Jun 17 19:01:42 2025

24 1ແລ້ວໂຢຊວຍກໍໄດ້ຮວບຮວມບັນດາເຜົ່າຕ່າງໆ ຂອງອິສະຣາເອນມາທີ່ເມືອງຊີເຄມ ແລະໄດ້ເອີ້ນພວກຜູ້ໃຫຍ່ຂອງອິສະຣາເອນ,
ພວກຜູ້ນໍາຂອງພວກເຂົາ, ພວກຜູ້ພິພາກສາຂອງພວກເຂົາ, ແລະເຈົ້າຫນ້າທີ່ຂອງພວກເຂົາ,
ແລະພວກເຂົາກໍມາສະແດງຕົວຕໍ່ຫນ້າພຣະເຈົ້າ. 2ໂຢຊວຍໄດ້ກ່າວກັບປະຊາຊົນທັງຫມົດວ່າ, "ນີ້ຄືສິ່ງທີ່ພຣະຢາເວພຣະເຈົ້າຂອງອິສະຣາເອນ,
ໄດ້ກ່າວວ່າ, ' ບັນພະບຸຣຸດຂອງພວກເຈົ້າ ນານມາແລ້ວໄດ້ໃຊ້ຊີວິດຢູ່ຟາກນັ້ນຂອງແມ່ນ້ໍາເອີຟຣັດ, ຄື ເຕຣາ
ພໍ່ຂອງອັບຣາຮາມແລະພໍ່ຂອງນາໂຮ - ແລະພວກເຂົານະມັສະການພະອື່ນໆ.

3ແຕ່ເຮົາໄດ້ນໍາພໍ່ຂອງພວກເຈົ້າມາຈາກຟາກນັ້ນຂອງຢູເຟຣັດແລະໄດ້ນໍາເຂົາມາຍັງແຜ່ນດິນການາອານແລະໄດ້ໃຫ້ເຂົາມີລູກຫລານຫລວງຫລາຍ
ໂດຍທາງລູກຊາຍຂອງເຂົາຄືອີຊາກ. 4ແລ້ວເຮົາໄດ້ໃຫ້ຢາໂຄບແລະເອຊາວແກ່ອີຊາກ. ເຮົາໄດ້ໃຫ້ແດນເນີນພູເຊອີ ແກ່ເອຊາວເປັນກໍາມະສິດ,
ແຕ່ຢາໂຄບແລະລູກຫລານຂອງເຂົາໄດ້ລົງໄປເອຢິບ.
5ເຮົາໄດ້ສົ່ງໂມເຊແລະອາໂຣນ, ແລະເຮົາໄດ້ທໍຣະມານຊາວເອຢິບດ້ວຍພັຍພິບັດ. ຫລັງຈາກນັ້ນ, ເຮົາໄດ້ນໍາພວກເຈົ້າອອກມາ.
6ເຮົາໄດ້ນໍາບັນພະບຸຣຸດຂອງພວກເຈົ້າອອກມາຈາກເອຢິບ. ແລະພວກເຈົ້າກໍໄດ້ມາເຖິງທະເລພວກເອຢິບໄດ້ຕິດຕາມພວກເຂົາດ້ວຍ
ເຫລົ່າຣົດເສິກແລະຄົນມ້າຈົນມາເຖິງທະເລຕົ້ນກົກ.
7ເມື່ອບັນພະບຸຣຸດຂອງພວກເຈົ້າຮ້ອງຫາພຣະຢາເວ, ພຣະອົງກໍຊົງບັນດານໃຫ້ຄວາມມືດເກີດຂຶ້ນລະຫວ່າງພວກເຈົ້າກັບຊາວເອຢິບ.
ພຣະອົງຊົງເຮັດໃຫ້ທະເລມາເຫນືອພວກເຂົາແລະຖ້ວມພວກເຂົາ. ພວກເຈົ້າໄດ້ເຫັນສິ່ງທີ່ເຮົາໄດ້ເຮັດໃນເອຢິບ.
ແລ້ວພວກເຈົ້າກໍໄດ້ຢູ່ໃນຖິ່ນແຫ້ງແລ້ງກັນດານເປັນເວລານານ.
8ເຮົາໄດ້ນໍາພວກເຈົ້າມາເຖິງແຜ່ນດິນຂອງຄົນອາໂມຣິດ, ຜູ້ທີ່ໄດ້ອາໄສຢູ່ອີກຟາກຫນຶ່ງຂອງແມ່ນ້ໍາຈໍແດນ. ພວກເຂົາສູ້ຮົບກັບພວກເຈົ້າ,
ແລະເຮົາໄດ້ມອບພວກເຂົາໄວ້ໃນມືຂອງພວກເຈົ້າ. ພວກເຈົ້າກໍຢຶດຄອງແຜ່ນດິນຂອງພວກເຂົາ,
ແລະເຮົາກໍໄດ້ທໍາລາຍພວກເຂົາຕໍ່ຫນ້າພວກເຈົ້າ.
9ແລ້ວບາຫລາກລູກຊາຍຂອງຊິບໂປ, ກະສັດຂອງໂມອາບໄດ້ລຸກຂຶ້ນໂຈມຕີອິສະຣາເອນ. ເຂົາໃຊ້ໃຫ້ໄປເອີ້ນບາລາອາມລູກຊາຍຂອງເບອໍ,
ໃຫ້ມາແຊ່ງພວກເຈົ້າ. 10ແຕ່ເຮົາບໍ່ໄດ້ຟັງບາລາອາມ. ແທ້ຈິງແລ້ວ, ເຂົາໄດ້ອວຍພອນພວກເຈົ້າ. ດັ່ງນັ້ນເຮົາໄດ້ຊ່ວຍພວກເຈົ້າໃຫ້ພົ້ນມືຂອງເຂົາ.
11ພວກເຈົ້າໄດ້ຂ້າມແມ່ນ້ໍາຈໍແດນມາທີ່ເມືອງເຢຣີໂກ. ພວກຜູ້ນໍາຂອງເຢຣີໂກໄດ້ຕໍ່ສູ້ກັບພວກເຈົ້າ, ລວມທັງຄົນອາໂມຣິດ, ຄົນເປຣີຊີ,
ຄົນການາອານ, ຄົນຮິດຕີ, ຄົນກີກາຊີ, ຄົນຮີວີແລະຄົນເຢບຸດ. ເຮົາໄດ້ມອບຊັຍຊະນະເຫນືອພວກເຂົາໃຫ້ພວກເຈົ້າ
ແລະໃຫ້ພວກເຂົາຢູ່ພາຍໃຕ້ການຄວບຄຸມຂອງພວກເຈົ້າ. 12ເຮົາໄດ້ສົ່ງຝູງຕໍ່ໄປຂ້າງຫນ້າພວກເຈົ້າ, ຊຶ່ງໄດ້ໄລ່ພວກເຂົາແລະກະສັດສອງຄົນ
ຂອງຊາວອາໂມຣິດອອກໄປຕໍ່ຫນ້າພວກເຈົ້າ. ມັນບໍ່ໄດ້ເກີດຂຶ້ນເພາະດ້ວຍດາບຫລືໂດຍລູກທະນູຂອງພວກເຈົ້າເລີຍ.
13ເຮົາໄດ້ມອບແຜ່ນດິນຊຶ່ງພວກເຈົ້າບໍ່ໄດ້ຖາກຖາງ ແລະເມືອງຕ່າງໆທີ່ພວກເຈົ້າບໍ່ໄດ້ສ້າງ,
ແລະບັດນີ້ພວກເຈົ້າໄດ້ເຂົ້າອາໄສຢູ່ໃນເມືອງເຫລົ່ານັ້ນ.
ພວກເຈົ້າໄດ້ກິນຫມາກໄມ້ຈາກສວນຫມາກອະງຸ່ນແລະສວນຫມາກກອກເທດທີ່ພວກເຈົ້າບໍ່ໄດ້ປູກ,'
14ດຽວນີ້ຈົ່ງຢໍາເກງພຣະຢາເວ ແລະນະມັສະການພຣະອົງດ້ວຍສຸດກໍາລັງແລະດ້ວຍຄວາມສັດຊື່;
ຈົ່ງປະຖິ້ມບັນດາພະເຫລົ່ານັ້ນທີ່ບັນພະບຸຣຸດຂອງພວກເຈົ້າໄດ້ນະມັສະການທີ່ອີກຟາກຫນຶ່ງຂອງແມ່ນ້ໍາເອີຟຣັດແລະເອຢິບນັ້ນສາ,
ແລະຈົ່ງນະມັດສະການແຕ່ພຣະຢາເວເທົ່ານັ້ນ.
15ແລະຖ້າພວກເຈົ້າເຫັນວ່າຜິດໃນສາຍຕາຂອງພວກເຈົ້າໃນການທີ່ພວກເຈົ້ານະມັສະການພຣະຢາເວ, ເຈົ້າກໍຈົ່ງເລືອກເອົາໃນວັນນີ້ວ່າ
ພວກເຈົ້າຈະບົວຣະບັດໃຜ, ບັນດາພະຕ່າງໆຊຶ່ງບັນພະບຸຣຸດຂອງເຈົ້າໄດ້ບົວຣະບັດຢູ່ຟາກແມ່ນ້ໍາເອີຟຣັດ, ຫລືບັນດາພະຂອງຊາວອາໂມຣິດ,
ໃນແຜ່ນດິນຊຶ່ງເຈົ້າອາໄສຢູ່. ແຕ່ສ່ວນຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າ ເຮົາຈະນະມັສະການພຣະຢາເວ."
16ພວກປະຊາຊົນໄດ້ຕອບແລະກ່າວວ່າ, "ພວກເຮົາຈະບໍ່ປະຖິ້ມພຣະຢາເວໄປບົວຣະບັດພະອື່ນໆ,
17ເພາະວ່າພຣະຢາເວພຣະເຈົ້າຂອງພວກເຮົາຜູ້ທີ່ໄດ້ນໍາເຮົາແລະບັນພະບຸຣຸດຂອງພວກເຮົາຂຶ້ນມາຈາກແຜ່ນດິນເອຢິບ,
ອອກມາຈາກເຮືອນທາດ, ແລະຜູ້ຊົງໄດ້ເຮັດການອັສະຈັນຍິ່ງໃຫຍ່ໃນສາຍຕາຂອງພວກເຮົາ,
ແລະຜູ້ຊົງຄຸ້ມຄອງເຮົາຕະຫລອດທາງທີ່ເຮົາໄດ້ເດີນໄປ, ແລະທ່າມກາງຊົນຊາດທັງຫລາຍຊຶ່ງເຮົາໄດ້ຜ່ານໄປ.
18ແລ້ວພຣະຢາເວໄດ້ຊົງຂັບໄລ່ປະຊາຊົນທັງຫມົດນັ້ນອອກໄປຕໍ່ຫນ້າພວກເຮົາ, ລວມທັງຄົນອາໂມຣິດຊຶ່ງໄດ້ອາໄສຢູ່ໃນແຜ່ນດິນນັ້ນ.
ດັ່ງນັ້ນພວກເຮົາຈະນະມັສະການພຣະຢາເວ, ເພາະວ່າພຣະອົງຊົງເປັນພຣະເຈົ້າຂອງພວກເຮົາ."
19ແຕ່ໂຢຊວຍໄດ້ກ່າວແກ່ປະຊາຊົນວ່າ, "ພວກເຈົ້າບໍ່ສາມາດບົວຣະບັດພຣະຢາເວໄດ້ດອກ, ເພາະວ່າພຣະອົງຊົງເປັນພຣະເຈົ້າຜູ້ບໍຣິສຸດ,
ພຣະອົງຊົງເປັນພຣະເຈົ້າຜູ້ຊົງຫວງແຫນ; ພຣະອົງຈະບໍ່ອະພັຍການລະເມີດຫລືການບາບຂອງພວກເຈົ້າ.
20ຖ້າພວກເຈົ້າປະຖິ້ມພຣະຢາເວແລະໄປນະມັສະການພະຂອງຄົນຕ່າງຊາດ, ແລ້ວພຣະອົງຈະຊົງຫັນກັບແລະທໍາລາຍພວກເຈົ້າ.
ພຣະອົງຈະເຜົາຜານພວກເຈົ້າຫລັງຈາກທີ່ພຣະອົງ, ໄດ້ຊົງເຮັດດີຕໍ່ພວກເຈົ້າມາແລ້ວ."
21ແຕ່ປະຊາຊົນໄດ້ກ່າວກັບໂຢຊວຍວ່າ, "ບໍ່, ພວກເຮົາຈະນະມັສະການພຣະຢາເວ." 22ແລ້ວໂຢຊວຍໄດ້ກ່າວກັບປະຊາຊົນວ່າ,
"ໃຫ້ພວກເຈົ້າເປັນພະຍານແກ່ຕົນເອງວ່າ ພວກເຈົ້າໄດ້ເລືອກພຣະຢາເວ, ສໍາລັບຕົວພວກເຈົ້າເອງເພື່ອນະມັສະການພຣະອົງ."
ພວກເຂົາໄດ້ກ່າວວ່າ, "ພວກເຮົາເປັນພະຍານ." 23"ບັດນີ້ ຈົ່ງປະຖິ້ມພະທັງຫລາຍຂອງຄົນຕ່າງຊາດທີ່ຢູ່ກັບພວກເຈົ້າ,
ແລະກັບໃຈມາຫາພຣະຢາເວພຣະເຈົ້າ, ຂອງອິສະຣາເອນ."
24ປະຊາຊົນໄດ້ກ່າວກັບໂຢຊວຍວ່າ,"ພວກເຮົາຈະນະມັສະການພຣະຢາເວ ພຣະເຈົ້າຂອງພວກເຮົາ"
ພວກເຮົາຈະເຊື່ອຟັງຂໍ້ຄໍາສັ່ງຂອງພຣະອົງ." 25ໂຢຊວຍຈຶ່ງໄດ້ເຮັດພັນທະສັນຍາສໍາລັບ
ປະຊາຊົນໃນມື້ນັ້ນແລະໄດ້ວາງກົດບັນຍັດກັບກົດລະບຽບຕ່າງໆທີ່ເມືອງຊີເຄມ.
26ໂຢຊວຍໄດ້ບັນທຶກຖ້ອຍຄໍາເຫລົ່ານີ້ໃນຫນັງສືກົດບັນຍັດຂອງພຣະເຈົ້າ. ເພິ່ນໄດ້ເອົາກ້ອນຫີນໃຫຍ່ແລະຂຶ້ນທີ່ຮົ່ມຂອງຕົ້ນໂອກ
ທີ່ຢູ່ຂ້າງສະຖານທີ່ນະມັສະການຂອງພຣະຢາເວ.

27ໂຢຊວຍໄດ້ກ່າວກັບປະຊາຊົນທັງຫມົດວ່າ, "ຫີນກ້ອນນີ້ຈະເປັນພະຍານໃຫ້ພວກເຮົາ.
ເພາະມັນໄດ້ຍິນທຸກຖ້ອຍຄຳທີ່ພຣະຢາເວໄດ້ກ່າວກັບພວກເຮົາ. ສະນັ້ນ ມັນຈະເປັນພະຍານຕໍ່ສູ້ພວກເຈົ້າ
ຫາກວ່າພວກເຈົ້າປະຕິເສດພຣະເຈົ້າຂອງພວກເຈົ້າ."28ດັ່ງນັ້ນ ໂຢຊວຍໄດ້ສົ່ງປະຊາຊົນໄປ ທຸກຄົນກໍກັບໄປສູ່ດິນແດນທີ່ເປັນສ່ວນຂອງໃຜລາວ.
29ພາຍຫລັງຈາກເຫດການເຫລົ່ານີ້ ໂຢຊວຍລູກຊາຍຂອງນູນຜູ້ຮັບໃຊ້ຂອງພຣະຢາເວ, ກໍໄດ້ຕາຍໄປເມື່ອອາຍຸໄດ້ 110ປີ.
30ພວກເຂົາກໍໄດ້ຝັງສົບຂອງເພິ່ນໄວ້ໃນເຂດທີ່ດິນມໍຣະດົກຂອງເພິ່ນທີ່ເມືອງຕິມນາດເສຣາ, ຊຶ່ງຢູ່ໃນເຂດເນີນພູເອຟຣາອິມ,
ທາງເຫນືອຂອງພູເຂົາກາອາດ.
31ອິສະຣາເອນກໍໄດ້ນະມັດສະການພຣະຢາເວຕະຫລອດຊົ່ວຊີວິດຂອງໂຢຊວຍ.
ແລະຕະຫລອດຊົ່ວຊີວິດຂອງພວກຜູ້ນຳທີ່ມີອາຍຸຍືນຍາວກວ່າໂຢຊວຍ,
ຄົນເຫລົ່ານັ້ນທີ່ໄດ້ມີປະສົບການທຸກສິ່ງທີ່ພຣະຢາເວໄດ້ຊົງກະທຳເພື່ອອິສະຣາເອນ.
32ກະດູກຂອງໂຢເຊບ, ທີ່ປະຊາຊົນອິສະຣາເອນໄດ້ນຳອອກມາຈາກເອຢິບ - ພວກເຂົາໄດ້ຝັງໄວ້ທີ່ເມືອງຊີເຄມ,
ໃນສ່ວນທີ່ດິນຊຶ່ງຢາໂຄບໄດ້ຊື້ໄວ້ຈາກລູກຊາຍຂອງຮາໂມພໍຂອງຊີເຄມ, ເພິ່ນໄດ້ຊື້ມາດວ້ຍເງິນຫນຶ່ງຮອ້ຍຫລຽນ,
ແລະມັນໄດ້ກາຍເປັນມໍຣະດົກສຳລັບລູກຫລານຂອງໂຢເຊບ.33ແລ້ວເອເລອາເຊລູກຊາຍຂອງອາໂລນກໍຕາຍໄປ.
ພວກເຂົາໄດ້ຝັງເພິ່ນໄວ້ທີ່ເກເບອາເມືອງຂອງຟີເນຮາລູກຊາຍຂອງເຂົາຊຶ່ງໄດ້ມອບໃຫ້ກັບເພິ່ນ. ມັນຢູ່ໃນດິນແດນເນີນພູຂອງເອຟຣາອິມ.

# ພວກຜູ້ປົກຄອງ

1 1ຫລັງຈາກໂຢຊວຍເສຍຊີວິດແລ້ວ, ຄົນອິສະຣາເອນໄດ້ທູນຖາມພຣະຢາເວ ວ່າ, “ໃຜຜູ້ທຳອິດຈະໂຈມຕີກັບຄົນການາອານສຳລັບພວກເຮົາ,
ເພື່ອສູ້ຮົບກັບພວກເຂົາ?”2ພຣະຢາເວຕອບວ່າ, “ຢູດາຈະໂຈມຕີ, ເບິ່ງແມ, ເຮົາໄດ້ມອບແຜ່ນດິນນັ້ນໃຫ້ພວກເຂົາແລ້ວ.”3ຄົນຢູດາຈຶ່ງເວົ້າ
ກັບຄົນຊີເມໂອນ, ພີ່ນ້ອງຂອງຕົນວ່າ, “ຈົ່ງຂຶ້ນໄປກັບພວກເຮົາ ໃນເຂດແດນທີ່ກຳນົດໃຫ້ແກ່ພວກເຮົາ ເພື່ອຈະໄດ້ຕໍ່ສູ້ກັບຄົນການາອານນຳກັນ.
ພວກເຮົາຈະໄປຮ່ວມຮົບໃນເຂດແດນທີ່ກຳນົດໃຫ້ແກ່ເຈົ້ານັ້ນດ້ວຍ.” ດັ່ງນັ້ນ, ເຜົ່າຊີເມໂອນກໍໄປກັບພວກເຂົາ.

4ຄົນຢູດາ ກໍໂຈມຕີ, ແລະ ພຣະຢາເວ ໄດ້ມອບໄຊຊະນະແກ່ຄົນການາອານ ແລະ ຄົນເປຣິຊີ. ພວກເຂົາ ປະຫານຫນຶ່ງຫມື່ນຄົນ ທີ່ເມືອງເບເຊັກ.
5ພວກເຂົາ ພົບອາໂດນີ-ເບເຊັກ ໃນເມືອງເບເຊັກ, ແລະ ພວກເຂົາສູ້ຮົບກັບເພິ່ນ ແລະ ໄດ້ປະຫານຄົນການາອານ ແລະ ຄົນເປຣິຊີ.
6ແຕ່ອາໂດນີເບເຊັກຫນີໄປໄດ້, ແລະ ພວກເຂົາ ນຳຈັບລາວໄດ້, ແລະ ພວກເຂົາໄດ້ຕັດນີ້ວຫົວໂປ້ມື ແລະ ນີ້ວຫົວໂປ້ຕີນຂອງລາວ.7ອາໂດນີເບ-
ເຊັກກ່າວວ່າ, “ຍັງມີກະສັດເຈັດສິບອົງ, ຜູ້ທີ່ມີຫົວໂປ້ມື ແລະ ຫົວໂປ້ຕີນຖືກຕັດອອກ, ໄດ້ເກັບເສດອາຫານຢູ່ກ້ອງໂຕະຂອງເຮົາ. ເຮົາໄດ້ເຮັດ
ຢ່າງໃດ, ພຣະຜູ້ເປັນເຈົ້າຈຶ່ງເຮັດແກ່ເຮົາເຊັ່ນນັ້ນ” ພວກເຂົາກໍຈັບຕົວເພິ່ນມາທີ່ກຸງເຢຣູຊາເລັມ ແລະ ເພິ່ນໄດ້ເສຍຊີວິດໃນບ່ອນນັ້ນ.
8ຄົນຢູດາໄດ້ເຂົ້າສູ້ຮົບເມືອງເຢຣູຊາເລັມ ແລະ ຢຶດເມືອງໄດ້. ພວກເຂົາ ໂຈມຕີຊາວເມືອງດ້ວຍຄົມດາບ ແລະ  ພວກເຂົາເອົາໄຟເຜົາເມືອງ.
9ພາຍຫລັງ, ຄົນຢູດາ ໄດ້ລົງໄປສູ້ຮົບກັບຄົນການາອານ ຜູ້ທີ່ອາໄສຢູ່ໃນເຂດແດນເຂົາ ແລະ ໃນຮ່ອມພູເຂົາ ຢູ່ທາງທິດຕາເວັນຕົກ10ຢູ-
ດາ ໄດ້ໄປສູ້ຮົບກັບຄົນການາອານ ຜູ້ຢູ່ໃນເຮັບໂຣນ (ເມືອງເຮັບໂຣນ ເມື່ອກ່ອນຊື່ວ່າ ກີຣິອາດອາຣະບາ) ແລະ ພວກເຂົາໄດ້ປະຫານເຊຊາຍ,
ອາຮີມານ ແລະ ຕານໄມ.
11ຈາກບ່ອນນັ້ນ ຄົນຢູດາໄດ້ຍົກທັບ ໄປສູ້ຮົບກັບຊາວເມືອງເດບີ (ເມືອງເດບີ ເມື່ອກ່ອນມີຊື່ວ່າກີຣິອາດເຊເຟ)12ກາເລັບ ກ່າວວ່າ “ໃຜໂຈມຕີເມືອງ
ກີຣິອາດເຊເຟ ແລະ ຢຶດໄດ້, ເຮົາຈະຍົກອັກສາ, ລູກສາວຂອງເຮົາ, ໃຫ້ເປັນເມຍ13ໂອດນີເອນ, ລູກຊາຍເກນາ (ຫລານຊາຍຂອງກາເລັບ)ຕີເອົາ
ເມືອງເດບີໄດ້, ດັ່ງນັ້ນ ກາເລັບຈຶ່ງຍົກອັກສາ,ລູກສາວຂອງຕົນ, ໃຫ້ເປັນເມຍຂອງເພິ່ນ.
14ຢູ່ຕໍ່ມາ ອັກສາ ມາຫາໂອດນີເອນ, ແລະ ນາງຈຶ່ງຊວນຜົວໃຫ້ ຂໍເນື້ອທີ່ນາພໍ່ໃຫ້ແກ່ນາງ. ນາງກໍລົງຈາກຫລັງລາ, ກາເລັບຖາມນາງວ່າ “ເຈົ້າ
ຕ້ອງການອັນໃດ?”15ນາງຈຶ່ງຕອບເພິ່ນວ່າ “ຂໍຂອງຂວັນໃຫ້ລູກຈັກຢ່າງຫນຶ່ງແດ່. ເມື່ອພໍ່ໃຫ້ລູກມາຢູ່ໃນແຜ່ນດິນແຫ້ງແລ້ງກັນດານແລ້ວ,
ຂໍໃຫ້ນ້ຳພຸແກ່ລູກດ້ວຍ.” ດັ່ງນັ້ນ, ກາເລັບກໍຍົກບໍ່ນ້ຳພຸເທິງ ແລະ ບໍ່ນ້ຳພຸລຸ່ມ ໃຫ້ແກ່ນາງ.
16ລູກຫລານຂອງພໍ່ເຖົ້າຂອງໂມເຊ ຄົນເກນີ ໄດ້ໄປຈາກເມືອງທີ່ມີຕົ້ນຕານ ພ້ອມກັບຄົນຢູດາ, ມາເຖິງຖິ່ນທີ່ກັນດານຂອງເຜົ່າຢູດາ ທີ່ຢູ່ໃນເນເກບ,
ເພື່ອອາໄສຢູ່ກັບຄົນຢູດາ ຢູ່ໃກ້ກັບອາຣາດ.17ຄົນຢູດາ ກໍຍົກທັບໄປຮ່ວມກັບຄົນຊີເມໂອນພີ່ນ້ອງຂອງພວກເຂົາ ແລະ ພວກເຂົາໄດ້ໂຈມຕີ ຄົນກາ-
ນາອານ ຜູ້ຢູ່ໃນເມືອງເຊຟັດ ແລະ ພວກເຂົາໄດ້ທຳລາຍເມືອງນັ້ນຢ່າງສິ້ນເຊີງ. ເມືອງນັ້ນຈຶ່ງຖືກເອີ້ນວ່າ ໂຮມາ.
18ຄົນຢູດາໄດ້ຢຶດເມືອງຄາຊາເຊັ່ນກັນ ແລະ ພ້ອມທັງອານາເຂດຮອບໆ, ເມືອງອາຊະກາໂລນ ແລະ ພ້ອມທັງອານາເຂດ ແລະ ເມືອງເອັກໂຣນ
ແລະ ພ້ອມອານາເຂດຮອບໆ.19ພຣະຢາເວ ໄດ້ສະຖິດກັບຄົນຢູດາ ແລະ ພວກເຂົາໄດ້ຢຶດແດນພູ-
ເຂົາເປັນກຳມະສິດ, ແຕ່ພວກເຂົາບໍ່ສາມາດຂັບໄລ່ຊາວເມືອງທີ່ຢູ່ໃນຮ່ອມພູເຂົານັ້ນໄດ້ ເພາະວ່າພວກເຫລົ່ານັ້ນມີລົດຮົບເຫລັກ.
20ເມືອງເຮັບໂຣນນັ້ນ ໄດ້ຍົກໃຫ້ກາເລັບ (ດັ່ງທີ່ໂມເຊໄດ້ກ່າວໄວ້), ແລະ ເຂົາໄດ້ຂັບໄລ່ລູກຊາຍທັງສາມຄົນຂອງອານາກອອກໄປ.21ແຕ່ຄົນເບັນ-
ຢາມິນ ບໍ່ໄດ້ຂັບໄລ່ ຄົນເຢບຸດ ຜູ້ຢູ່ໃນເຢຣູຊາເລັມໃຫ້ອອກໄປ. ດັ່ງນັ້ນ ຄົນເຢບຸດຈຶ່ງອາໄສຢູ່ກັບຄົນເບັນຢາມິນໃນເຢຣູຊາເລັມຈົນເຖິງທຸກມື້ນີ້.
22ນອກນີ້ ເຮືອນຂອງໂຢເຊັບກະກຽມໄປສູ້ຮົບເມືອງເບັດເອນ, ແລະ ພຣະຢາເວສະຖິດກັບພວກເຂົາ.23ພວກເຂົາໄດ້ໃຊ້ຄົນໄປສອດແນມເມືອງ
ເບັດເອນ (ແຕ່ກ່ອນເມືອງນີ້ ຊື່ ລູເຊ).24ຜູ້ສອດແນມເຫັນຊາຍຄົນຫນຶ່ງຍ່າງອອກມາຈາກເມືອງ, ແລະ ພວກເຂົາຈຶ່ງເວົ້າກັບລາວວ່າ “ຂໍຊີ້ທາງເຂົ້າ
ເມືອງນີ້ໃຫ້ແກ່ພວກເຮົາດ້ວຍ, ແລະ ພວກເຮົາຈະປານີເຈົ້າ.”
25ຊາຍຄົນນັ້ນ ກໍຊີ້ທາງເຂົ້າເມືອງໃຫ້ແກ່ພວກເຂົາ, ແລະ ດັ່ງນັ້ນ ພວກເຂົາໄດ້ໂຈມຕີຊາວເມືອງນັ້ນ ດ້ວຍຄົມດາບ, ແຕ່ພວກເຂົາປ່ອຍຊາຍຄົນ
ນັ້ນ ແລະຄອບຄົວຂອງລາວທັງຫມົດລອດໄປ26ຫລັງຈາກນັ້ນ ຊາຍຄົນນັ້ນກໍເຂົ້າໄປໃນແຜ່ນດິນຂອງຄົນຮິດຕີ ແລະ ສ້າງເມືອງຂຶ້ນເມືອງຫນຶ່ງ,
ເອີ້ນຊື່ວ່າເມືອງລູເຊ, ຊຶ່ງເປັນຊື່ຢູ່ຈົນຮອດທຸກມື້ນີ້.
27ຄົນມານາເຊ ບໍ່ໄດ້ຂັບໄລ່ຊາວເມືອງທີ່ອາໄສຢູ່ໃນເມືອງເບັດເຊອານ ແລະ ຊາວຊົນນະບົດຂອງເມືອງນັ້ນໃຫ້ອອກໄປ, ຫລື ຊາວເມືອງຕາອານັກ
ແລະ ຊາວຊົນນະບົດຂອງເມືອງນັ້ນ, ຫລື ຊາວເມືອງໂດເຣ ແລະ ຊາວຊົນນະບົດຂອງເມືອງນັ້ນ, ຫລື ຊາວເມືອງອິບເລອາມ ແລະ ຊາວຊົນນະ-
ບົດຂອງເມືອງນັ້ນ, ຫລື ຊາວເມືອງເມກິດໂດ ແລະ ຊາວຊົນນະບົດຂອງເມືອງນັ້ນ, ເພາະວ່າຄົນການາອານ ຍັງຕັດສິນໃຈອາໄສຢູ່ໃນແຜ່ນດິນ


generated on Tue Jun 17 19:01:42 2025

ນັ້ນ.[28]ເມື່ອຄົນອິສະຣາເອນ ມີກຳລັງເຂັ້ມແຂງຂຶ້ນ, ພວກເຂົາກໍບັງຄັບຄົນການາ-
ອານ ຮັບໃຊ້ ພວກເຂົາດ້ວຍການເຮັດວຽກໜັກ, ແຕ່ພວກເຂົາບໍ່ໄດ້ຂັບໄລ່ຄົນພວກນັ້ນອອກໄປໂດຍສິ້ນເຊີງ.
[29]ເອຟຣາອິມບໍ່ໄດ້ຂັບໄລ່ຄົນການາອານ ຜູ້ອາໃສຢູ່ໃນເມືອງເກເຊໃຫ້ອອກໄປ, ດັ່ງນັ້ນຄົນການາອານ ຍັງສືບຕໍ່ອາໃສຢູ່ໃນເມືອງເກເຊກັບ
ພວກເຂົາ.
[30]ເຊບູໂລນບໍ່ໄດ້ຂັບໄລ່ຊາວເມືອງກິດໂຣນ, ຫລື ຊາວເມືອງນາຮາລານ, ແລະ ດັ່ງນັ້ນ ຄົນການາອານໄດ້ສືບຕໍ່ອາໃສຢູ່ກັບພວກເຂົາ, ແຕ່ຄົນເຊບູ-
ໂລນ ກໍບັງຄັບຄົນການາອານ ຮັບໃຊ້ພວກເຂົາ ດ້ວຍການເຮັດວຽກໜັກ.
[31]ອາເຊບໍ່ໄດ້ຂັບໄລ່ຊາວເມືອງອັກໂກ, ຫລື ຊາວເມືອງຊີໂດນ, ຫລື ຊາວເມືອງອາຮະລັບ, ຫລື ຊາວເມືອງອັກຊິບ, ຫລື ຊາວເມືອງເຮນບາ, ຫລື
ຊາວເມືອງອາເຟັກ, ຫລື ຊາວເມືອງເຣໂຮບ.[32]ດັ່ງນັ້ນ ຄົນອາເຊໄດ້ອາໄສຢູ່ກັບຄົນການາອານ(ຜູ້ອາໄສໃນແຜ່ນດິນນັ້ນ), ເພາະວ່າພວກເຂົາບໍ່ໄດ້
ຂັບໄລ່ພວກນັ້ນໃຫ້ອອກໄປ.
[33]ເຜົ່າເນັບທາລີບໍ່ໄດ້ຂັບໄລ່ຜູ້ອາໄສຢູ່ໃນເມືອງເບັດເຊເມັດ, ຫລື ຊາວເມືອງເບັດ-ອານາດ. ດັ່ງນັ້ນ ເຜົ່ານັບທາອາໃສຢູ່ກັບຄົນການາອານ
(ຜູ້ອາໄສໃນແຜ່ນດິນນັ້ນ). ເຖິງຢ່າງໃດກໍຕາມ, ຊາວເມືອງເບັດ-ເຊເມັດ ແລະ ຊາວເມືອງເບັດ-ອານາດ ໄດ້ຖືກບັງຄັບ ຮັບໃຊ້ແຮງງານໜັກ
ໃຫ້ແກ່ຄົນນັບທາລີ.
[34]ຄົນອາໂມໄດ້ຂັບໄລ່ເຜົ່າດານ ໃຫ້ອາໄສຢູ່ໃນເຂດພູເຂົາຂອງເມືອງ, ບໍ່ຍອມໃຫ້ພວກເຂົາລົງມາອາໄສຢູ່ຮ່ອມພູເຂົາ.[35]ດັ່ງນັ້ນ ຄົນອາໂມຍັງອາ-
ໃສຢູ່ທີ່ພູເຂົາເຮເລັດ, ໃນເມືອງໄອຢາໂລນ, ແລະ ໃນເມືອງຊາອານບິມ, ແຕ່ອຳນາດທາງທະຫານຂອງເຮືອນຂອງໂຢເຊັບເໜືອກວ່າພວກເຂົາ,
ແລະ ພວກເຂົາຈຶ່ງໄດ້ຖືກບັງຄັບ ຮັບໃຊ້ແຮງງານໜັກ ໃຫ້ແກ່ພວກເຂົາ.[36]ອານາເຂດຂອງຄົນອາໂມແມ່ນຕັ້ງຕົ້ນແຕ່ທາງຂ້ວາມພູເຂົາອັກຣັບບິມ
ທີ່ເມືອງເຊລາຂຶ້ນໄປຮອດພູເຂົາຂອງເມືອງ.

 generated on Tue Jun 17 19:01:42 2025

2 [1]ທູດສະຫວັນຂອງພຣະຢາເວ ໄດ້ສະເດັດມາຈາກເມືອງກິນການເພື່ອໄປໂບກິມ, ແລະ ເວົ້າວ່າ, “ເຮົາພາພວກເຈົ້າອອກມາຈາກປະເທດເອຢິບ
ແລະ ນຳພວກເຈົ້າເຂົ້າໄປໃນແຜ່ນດິນທີ່ ເຮົາໄດ້ສັນຍາໄວ້ກັບປູ່ຍ່າຕາຍາຍຂອງພວກເຈົ້າ. ເຮົາໄດ້ບອກວ່າ, 'ເຮົາຈະບໍ່ລຶບລ້າງສັນຍາທີ່ມີກັບ
ພວກເຈົ້າ.[2]ພວກເຈົ້າບໍ່ຕ້ອງສັນຍາໃດໆ ກັບຄົນທີ່ອາໄສຢູ່ໃນແຜ່ນດິນນີ້. ພວກເຈົ້າຕ້ອງທຳລາຍແທ່ນບູຊາທັງຫມົດຂອງພວກເຂົາຖິ້ມ'. ແຕ່ພວກ
ເຈົ້າບໍ່ໄດ້ເຮັດຕາມ ທີ່ເຮົາໄດ້ບອກໄວ້. ພວກເຈົ້າກັບໄປເຮັດຢ່າງອື່ນແທນ?

[3]ສະນັ້ນ ເຮົາຂໍບອກດຽວນີ້ວ່າ, 'ເຮົາຈະບໍ່ຂັບໄລ່ຄົນການາອານອອກໄປກ່ອນພວກເຈົ້າ, ແຕ່ພວກເຂົາຈະກາຍເປັນຫນາມຍອກຂອງພວກເຈົ້າ
ແລະ ບັນດາພຣະຕ່າງໆຂອງພວກເຂົາ ຈະເປັນຜູ້ລໍ້ລວງພວກເຈົ້າ.'"[4]ເມື່ອທູດສະຫວັນຂອງພຣະຢາເວເວົ້າຖ້ອຍຄຳເຫລົ່ານີ້ຕໍ່ຄົນອິສະຣາເອນ
ທຸກຄົນແລ້ວ, ປະຊາຊົນກໍພາກັນຮ້ອງສຽງດັງ ແລະ ຮ້ອງໄຫ້.[5]ພວກເຂົາເອີ້ນສະຖານທີ່ວ່າ ໂບກິມ. ແລ້ວພວກເຂົາກໍນຳເຄື່ອງບູຊາຖວາຍແດ່
ພຣະຢາເວທີ່ນັ້ນ.
[6]ເມື່ອໂຢຊວຍໄດ້ສົ່ງຄົນກັບຄືນເມືອແລ້ວ, ຄົນອິສະຣາເອນແຕ່ລະຄົນກໍໄປໃນສະຖານທີ່ຖືກຮັບມອບກຳມະສິດ,
ເພື່ອຢຶດຄອງເປັນເຈົ້າຂອງທີ່ດິນຂອງພວກເຂົາ.[7]ຄົນໄດ້ຮັບໃຊ້ພຣະຢາເວຕະຫລອດຊົ່ວຊີວິດຂອງໂຢຊວຍ ແລະ ພວກຜູ້ອາວຸໂສທີ່ມີອາຍຸ
ຂອງຍືນກວ່າລາວ, ພວກຜູ້ນຳເຫລົ່ານີ້ ເປັນຜູ້ຮູ້ຈັກກິຈະການທຸກຢ່າງ ທີ່ພຣະຢາເວ ຊົງເຮັດຕໍ່ພວກອິສະຣາເອນ.[8]ໂຢຊວຍລູກຂອງນູນຜູ້ຮັບໃຊ້
ຂອງພຣະຢາເວ, ໄດ້ເສຍຊີວິດ ເມື່ອອາຍຸໄດ້ຮ້ອຍສິບປີ.
[9]ພວກເຂົາເອົາສົບຂອງເພິ່ນຝັງໄວ້ໃນດິນຂອງເພິ່ນເອງ ຢູ່ເທິງພູເອຟຣາອິມ ທີ່ເມືອງຕິມນາດເສຣາ, ຢູ່ທາງທິດເຫນືອຂອງພູເຂົາກາອາດ.[10]ຕໍ່ມາ
ຄົນໃນສະໄຫມທຸກໆຄົນ ກໍເສຍຊີວິດ ແລະ ຖືກຝັງເຊັ່ນດຽວກັນ. ພວກທີ່ເກີດຮຸ່ນໃຫມ່ຈະບໍ່ຮູ້ພຣະຢາເວ ຫລື ທຸກສິ່ງທີ່ພຣະອົງໄດ້ຊົງເຮັດຕໍ່
ຊາວອິສະຣາເອນ.
[11]ຄົນອິສະຣາເອນເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ ແລະ ພວກເຂົາຮັບໃຊ້ພຣະບາອານ.[12]ພວກເຂົາໄດ້ຕັດຂາດຈາກພຣະຢາເວ,
ພຣະເຈົ້າແຫ່ງປູ່ຍ່າຕາຍາຍຂອງພວກເຂົາ, ຜູ້ຊົງນຳພາພວກເຂົາອອກຈາກປະເທດເອຢິບ. ພວກເຂົາພາກັນນະມັດສະການພຣະເຈົ້າອື່ນ, ຊຶ່ງ
ເປັນພຣະເຈົ້າຂອງຊົນຊາດ ທີ່ຢູ່ອ້ອມຮອບພວກເຂົານັ້ນ, ແລະ ພວກເຂົາໄດ້ພາກັນຂາບໄຫວ້ພຣະເຫລົ່ານີ້. ພວກເຂົາເຮັດໃຫ້ພຣະຢາເວ ຊົງ
ພຣະພິໂລດ ເພາະວ່າ.[13]ພວກເຂົາຕັດຂາດຈາກພຣະຢາເວ ແລະ ນະມັດສະການພຣະບາອານ ແລະ ພຣະອັດສະຕາກ.
[14]ຄວາມຊົງພຣະພິໂລດຂອງພຣະຢາເວ ຕໍ່ຄົນອິສະຣາເອນ, ແລະ ພຣະອົງ ຈຶ່ງຊົງເຮັດໃຫ້ພວກໂຈນເຂົ້າມາ ປຸ້ນຊັບສິນຂອງພວກເຂົາ. ພຣະອົງ
ຍັງຊົງຂາຍພວກເຂົາເປັນທາດ ໃຫ້ຜູ້ທີ່ຖືກຄອບຄອງດ້ວຍກຳລັງຂອງສັດຕຣູທີ່ຢູ່ອ້ອມຮອບນັ້ນ, ດັ່ງນັ້ນ ພວກເຂົາຈຶ່ງບໍ່ສາມາດປ້ອງກັນຕົວ
ເອງຈາກສັດຕຣູຂອງພວກເຂົາໄດ້ອີກຕໍ່ໄປ.[15]ເມື່ອໃດກໍຕາມ ຊາວອິສະຣາເອນ ໄດ້ອອກໄປສູ້ຮົບ, ພຣະຫັດຂອງພຣະຢາເວ ກໍຊົງຕໍ່ສູ້ ເພື່ອປາບ
ພວກເຂົາ ເຮັດໃຫ້ພວກເຂົາພ່າຍແພ້, ດັ່ງທີ່ພຣະອົງຊົງສາບານຕໍ່ພວກເຂົາ ແລະ ພວກເຂົາໄດ້ຕົກຢູ່ໃນຄວາມຂັດສົນຢ່າງໃຫຍ່ຫລວງ.
[16]ຫລັງຈາກ ພຣະຢາເວ ໄດ້ຊົງຕັ້ງຜູ້ປົກຄອງ, ຜູ້ຊ່ອຍພວກເຂົາໃຫ້ພົ້ນຈາກເງື້ອມມືຂອງພວກລັກຂະໂມຍຊັບສິນຂອງພວກເຂົາ.
[17]ເຖິງຢ່າງໃດກໍຕາມ ພວກເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງພວກຜູ້ປົກຄອງເຫລົ່ານັ້ນ. ພວກເຂົາບໍ່ສັດຊື່ຕໍ່ພຣະຢາເວ ແລະ
ເຮັດຕົວເອງໃຫ້ເປັນໂສເພນີໃຫ້ພຣະອື່ນ ແລະ ນະມັດສະການພຣະເຫລົ່ານັ້ນ.
ບໍ່ດົນພວກເຂົາໄດ້ຫັນໄປຈາກທາງທີ່ບັນພະບຸຣຸດຂອງພວກເຂົາໄດ້ດຳລົງຊີວິດ-ຜູ້ທີ່ໄດ້ເຊື່ອຟັງຂໍ້ຄຳສັ່ງຂອງພຣະຢາເວ-
ແຕ່ພວກເຂົາເອງບໍ່ໄດ້ປະຕິບັດຕາມ.
[18]ເມື່ອພຣະຢາເວຊົງໂຜດໃຫ້ມີຜູ້ປະກາດພຣະຄັມໃຫ້ພວກເຂົາ, ພຣະອົງ ກໍຊົງຊ່ອຍເຫລືອຜູ້ປົກຄອງ ແລະ ຊົງຊ່ວຍໃຫ້ພົ້ນຈາກເງື້ອມມືຂອງ
ສັດຕຣູຂອງພວກເຂົາຕະຫລອດຊົ່ວຊີວິດຂອງຜູ້ປະກາດພຣະຄັມ. ພຣະຢາເວ ຊົງມີຄວາມເມດຕາຕໍ່ພວກເຂົາ ໃນຂະນະພວກເຂົາໄດ້ຮ້ອງຄວນ
ຄາງ ເພາະວ່າ ຄົນເຫລົ່ານັ້ນທີ່ໄດ້ຂົ່ມເຫັງພວກເຂົາ.[19]ແຕ່ເມື່ອຜູ້ປະກາດພຣະຄັມເສຍຊີວິດໄປແລ້ວ, ພວກເຂົາ ຈະຫັນຫນີໄປ ແລະ ເຮັດການ
ຊົ່ວຮ້າຍຫລາຍກວ່າບັນພະບຸຣຸດຂອງພວກເຂົາ. ພວກເຂົາປະຕິເສດທີ່ຈະປະຖິ້ມການກະທຳທີ່ຊົ່ວຮ້າຍໃດໆຂອງພວກເຂົາ ຫລື
ວິທີທີ່ດື້ດ້ານຂອງພວກເຂົາ.
[20]ຄວາມຊົງພຣະພິໂລດຂອງພຣະຢາເວ ເຮັດໃຫ້ເກີດການຕໍ່ຕ້ານຊາວອິສະຣາເອນ; ຊຶ່ງກ່າວວ່າ “ເພາະຊົນຊາດເຫລົ່ານີ້ ໄດ້ລະເມີດຄຳສັນຍາ
ຂອງເຮົາທີ່ເຮົາໄດ້ກຳນົດໄວ້ກັບບັນພະບຸຣຸດຂອງພວກເຂົາ - ເພາະວ່າພວກເຂົາບໍ່ໄດ້ຟັງຄຳຂອງເຮົາ-[21]ຕັ້ງແຕ່ນີ້ໄປ ເຮົາຈະບໍ່ຂັບໄລ່ຊົນຊາດໃດ
ທີ່ໂຢຊວຍ ຍັງເຫລືອໄວ້ຢູ່ ໃນເວລາທີ່ລາວເສຍຊີວິດ.[22]ເຮົາຈະເຮັດສິ່ງນີ້ ເພື່ອ ເຮົາຈະທົດສອບພວກອິສະຣາເອນ, ວ່າພວກເຂົາຈະຖືຮັກສາເສັ້ນ-
ທາງຂອງພຣະຢາເວ ແລະ ດຳເນີນຕາມນັ້ນ, ຕາມທີ່ບັນພະບຸຣຸດຂອງພວກເຂົາໄດ້ຮັກສາຫລືບໍ່.”[23]ນີ້ແມ່ນເຫດຜົນທີ່ ພຣະ-
ຢາເວ ໄດ້ຊົງປ່ອຍຊົນຊາດເຫລົ່ານັ້ນໄວ້ ແລະ ບໍ່ໄດ້ຂັບໄລ່ອອກໄປຢ່າງໄວວາ ແລະ ມອບພວກເຂົາໃຫ້ຢູ່ໃຕ້ອຳນາດຂອງໂຢຊວຍ.


generated on Tue Jun 17 19:01:42 2025

3 1ຕໍ່ໄປນີ້ພຣະຢາເວ ຊົງປ່ອຍໃຫ້ຊົນຊາດເຫລົ່ານີ້ ເພື່ອໃຊ້ທົດລອງຄົນອິສະຣາເອນ, ຄືທຸກຄົນໃນອິສະຣາເອນຊຶ່ງຍັງບໍ່ເຄີຍປະສົບສົງຄາມ
ໃດໆເກີດຂຶ້ນໃນການາອານ. 2(ພຣະອົງ ໄດ້ຊົງສອນເລື່ອງສົງຄາມກັບໃຫ້ເຊື້ອສາຍຄົນອິສະຣາເອນຮຸ່ນໃຫມ່ ຜູ້ທີ່ຍັງບໍ່ຮູ້ມາ
ກ່ອນ.) 3ຄົນເຫລົ່ານີ້ ຄືບັນຫາຊົນຊາດ: ຄືກະສັດທັງຫ້າຂອງພວກຟີລິດສະຕິນ, ຄົນການາອານທັງຫມົດ, ຊາວຊີໂດນ ແລະ ຊາວຮີວີ ຜູ້ອາໃສຢູ່
ເທິງພູເຂົາເລບານອນ, ຕັ້ງແຕ່ພູເຂົາບາອານ ເຮີໂມນ ເຖິງທາງເຂົ້າເມືອງຮາມັດ.

4ບັນດາຊົນຊາດເຫລົ່ານີ້ ທີ່ເຫລືອຢູ່ ເປັນວິທີຂອງພຣະຢາເວ ຊົງທົດລອງຄົນອິສະຣາເອນ, ເພື່ອຢືນຢັນວ່າພວກເຂົາ ຈະເຊື່ອຟັງພຣະບັນຍັດ, ຊຶ່ງ
ພຣະອົງສັ່ງໄວ້ກັບບັນພະບູຣຸດຂອງພວກເຂົາໂດຍຜ່ານທາງໂມເຊນັ້ນຫລືບໍ່. 5ດັ່ງນັ້ນ ຄົນອິສະຣາເອນຈຶ່ງອາໃສຢູ່ໃນບັນດາຄົນການາອານ, ຄົນ
ຮິດຕີ, ຄົນອາໂມ, ຄົນເປຣີຊີ, ຄົນຮີວີ, ແລະ ຄົນເຢບຸດ. 6ພວກເຂົາໄດ້ສູ່ຂໍລູກສາວຂອງຄົນເຫລົ່ານັ້ນມາເປັນເມຍຂອງພວກເຂົາ ແລະ
ພວກເຂົາໄດ້ຍົກລູກສາວຂອງຕົນໃຫ້ແກ່ລູກຊາຍຂອງພວກເຂົາ, ແລະ ພວກເຂົາກໍ່ຮັບໃຊ້ພຣະເຈົ້າຂອງພວກເຂົາເຫລົ່ານັ້ນ.
7ຄົນອິສະຣາເອນໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ ແລະ ໄດ້ຫລົງລືມພຣະຢາເວ ເປັນພຣະເຈົ້າຂອງຕົນ.
ພວກເຂົາໄດ້ນະມັດສະການບັນດາພຣະບາອານ ແລະເຈົ້າແມ່ອາເຊຣາ. 8ສະນັ້ນ, ພຣະພິໂລດຂອງພຣະຢາເວກໍ່ພຸ່ງຂຶ້ນຕໍ່ອິສະຣາເອນ ແລະ
ພຣະອົງຊົງຂາຍພວກເຂົາໄວ້ໃນມືຂອງກະສັດກູຊານຣິຊາທາອິມ ກະສັດເມືອງເມໂຊໂປຕາເມຍ ແລະ ຄົນອິສະຣາເອນໄດ້ຮັບໃຊ້ກູຊານຣິຊາ-
ທາອິມ ເປັນເວລາແປດປີ.
9ເມື່ອຄົນອິສະຣາເອນຮ້ອງທູນຕໍ່ພຣະຢາເວ, ພຣະຢາເວ ໄດ້ມອບຜູ້ໃດຜູ້ຫນຶ່ງ ທີ່ຈະມາຊ່ວຍຄົນອິສະຣາເອນ, ແລະ ຊ່ວຍພວກເຂົາທັງຫລາຍ
ໃຫ້ລອດພົ້ນ: ໂອດນີເອນລູກຊາຍຂອງເກນາດ (ນ້ອງຊາຍຂອງກາເລັບ). 10ພຣະວິນຍານຂອງພຣະຢາເວໄດ້ຊົງເສີມກຳລັງລາວ, ແລະ
ລາວຕັດສິນຄົນອິສະຣາເອນ ແລະ ລາວກໍ່ອອກໄປສູ້ຮົບ ແລະ ພຣະຢາເວ ໄດ້ມອບລາວມີໄຊຊະນະ ເຫນືອກະສັດກູຊານຣິຊາທາອິມ ກະສັດ
ເມືອງອາຣາມ. ມືຂອງໂອດນີເອນ ເອົາຊະນະ ກູຊານຣິຊາທາອິມ. 11ແຜ່ນດິນນັ້ນ ຈຶ່ງໄດ້ຄວາມສະຫງົບສຸກມາສີ່ສິບປີ. ແລ້ວໂອດນີເອນລູກຊາຍ
ເກນາດກໍໄດ້ເສຍຊີວິດ.
12ຫລັງຈາກນັ້ນ ຄົນອິສະຣາເອນໄດ້ເຮັດສິ່ງຊົ່ວຮ້າຍອີກຕໍ່ໄປໃນສາຍຕາຂອງພຣະຢາເວ, ແລະ ພຣະຢາເວ ຈຶ່ງຊົງເສີມກຳລັງແກ່ກະສັດເອກ-
ໂລນຂອງເມືອງໂມອາບ ໃຫ້ມີອຳນາດເຫນືອຄົນອິສະຣາເອນ. 13ເອັກໂລນ ໄດ້ສົມທົບກັບຄົນອຳໂມນ ແລະ ຄົນອາມາເຫລັກ ຍົກທັບໄປໂຈມຕີ
ແລະ ເອົາຊະນະ ອິສະຣາເອນ, ແລະ ພວກເຂົາໄດ້ຍຶດເມືອງເຢຣິໂກ. 14ຄົນອິສະຣາເອນຈຶ່ງຮັບໃຊ້ເອກໂລນກະສັດແຫ່ງໂມອາບເປັນເວລາສິບ
ແປດປີ.
15ເມື່ອຄົນອິສະຣາເອນຮ້ອງທູນຕໍ່ພຣະຢາເວ, ພຣະຢາເວ ໄດ້ຊົງມອບຜູ້ໃດຜູ້ຫນຶ່ງ ຈະມາຊ່ວຍພວກເຂົາ, ເອຮຸດ ລູກຊາຍເກຣາ, ຄົນເບັນຢາ-
ມິນ, ຄົນແຮງມືຊ້າຍ. ຄົນອິສະຣາເອນໃຫ້ເພິ່ນ, ເປັນຜູ້ນຳເອົາສ່ວຍໄປມອບແກ່ກະສັດເອກໂລນຂອງເມືອງໂມອາບ
16ເອຮຸດໄດ້ເຮັດດາບຂອງຕົວເອງ ທີ່ມີຂອບຄົມສອງດ້ານຍາວຫນຶ່ງສອກ; ລາວໄດ້ເຫນັບໄວ້ໃສ່ໃນເສື້ອຜ້າຢູ່ກົກຂາເບື້ອງຂວາຂອງລາວ. 17ລາວ-
ກໍນຳສ່ວຍໄປມອບແກ່ກະສັດເອກໂລນແຫ່ງເມືອງໂມອາບ (ຕອນນີ້ເອກໂລນເປັນຄົນຕຸ້ຍຫລາຍ). 18ຫລັງຈາກ ເອຮຸດໄດ້ມອບສ່ວຍແລ້ວ, ເພິ່ນ
ກໍອອກໄປກັບຄົນທີ່ຫາບຫາມສ່ວຍນັ້ນ.
19ເຖິງຢ່າງໃດກໍຕາມ ສຳລັບເອຮຸດ, ເມື່ອລາວໄປເຖິງສະຖານທີ່ມີຮູບເຄົາລົບສະຫລັກທີ່ຢູ່ໃກ້ກິນການ, ລາວກໍຫັນກັບໄປ, ແລະ ລາວທູນວ່າ
"ຂ້າແດ່ກະສັດຂອງຂ້ານ້ອຍ, ຂ້ານ້ອຍມີຂໍ້ຄວາມລັບ ທີ່ຈະກາບທູນໃຫ້ຮູ້" ເອກໂລນຈຶ່ງມີບັນຊາວ່າ "ງຽບໆ!" ດັ່ງນັ້ນ ທຸກຄົນທີ່ເຝົ້າຢູ່ກໍທູນລາ
ອອກໄປຈາກຫ້ອງ. 20ເອຮຸດກໍເຂົ້າໄປເຝົ້າເພິ່ນ. ຂະນະນັ້ນກະສັດປະທັບຢູ່ອົງດຽວໃນຫ້ອງເຢັນຂອງຊັ້ນເທິງ. ເອຮຸດທູນວ່າ "ຂ້ານ້ອຍມີພຣະຄຳ
ສັ່ງຈາກພຣະເຈົ້າຖວາຍພຣະອົງ" ກະສັດຈຶ່ງລຸກຂຶ້ນຈາກພຣະທີ່ນັ່ງ.
21ເອຮຸດກໍເອື້ອມມືຊ້າຍຂອງລາວ ແລະ ຖອດດາບອອກຈາກຂາຂວາຂອງລາວ, ແລະ ລາວກໍແທງເຂົ້າໄປໃນຮ່າງກາຍຂອງກະສັດເອກໂລນ.
22ດ້າມດາບກໍຈົມເຂົ້າໄປຫມົດທັງດາບໃນຕົວພຣະອົງ. ດ້ວຍປາຍດ້າມກໍອອກມາທາງຫລັງຂອງເພິ່ນ, ແລະ ໄຂມັນຫຸ້ມດາບໄວ້,
ສຳລັບເອຮຸດບໍ່ໄດ້ຖອດດາບອອກຈາກທ້ອງຂອງເພິ່ນ. 23ຈາກນັ້ນ ເອຮຸດອອກໄປທີ່ລະບຽງ ແລະ ໄດ້ປິດປະຕູຫ້ອງຊັ້ນເທິງທີ່ຢູ່ຫລັງເຂົາ ແລະ
ໃສ່ກະແຈປະຕູໄວ້.
24ຫລັງຈາກ ເອຮຸດໄປແລ້ວ, ພວກຂ້າຮັບໃຊ້ຂອງກະສັດກໍເຂົ້າມາ; ພວກເຂົາເຫັນວ່າປະຕູຫ້ອງຊັ້ນເທິງປິດໃສ່ກຸນແຈຢູ່, ດັ່ງນັ້ນ ພວກເຂົາຈຶ່ງຄິດ-
ວ່າ "ພຣະອົງກຳລັງຜ່ອນຄາຍຕົວເອງໃນຄວາມເຢັນຂອງຫ້ອງຊັ້ນເທິງຢ່າງແນ່ນອນ". 25ພວກເຂົາກັງວົນຫລາຍຂຶ້ນເລື້ອຍໆ
ຈົນກະທັ້ງພວກເຂົາຮູ້ສຶກວ່າ ພວກເຂົາລະເລີຍຫນ້າທີ່ຂອງພວກເຂົາ ເມື່ອກະສັດຍັງບໍ່ໄດ້ເປີດປະຕູຫ້ອງຊັ້ນເທິງ. ດັ່ງນັ້ນ ພວກເຂົາຈຶ່ງເອົາກະແຈ
ແລະ ໄຂເປີດປະຕູອອກ, ແລະ ເຫັນເຈົ້ານາຍຂອງຕົນລົ້ມລົງພື້ນ, ເສຍຊີວິດ.
26ໃນຂະນະ ທີ່ຜູ້ຮັບໃຊ້ຄອຍຖ້າກັນຢູ່ນັ້ນ, ສົງໃສວ່າ ພວກເຂົາຄວນເຮັດຫຍັງ, ເອຮຸດ ກໍຫນີໄປພົ້ນ ແລະ ຂ້ວາມໄປບ່ອນມີ
ຮູບແກະສະຫລັກຮູບປັ້ນ, ແລະ ດັ່ງນັ້ນລາວຈຶ່ງຫນີມາເຖິງເມືອງເສອີຣາ. 27ເມື່ອລາວມາເຖິງແລ້ວ ຈຶ່ງເປົ່າສຽງແກດັງຂຶ້ນໃນເຂດເນີນພູ-
ເຂົາແຫ່ງເອຟຣາຢິມ. ຈາກນັ້ນຄົນອິສະຣາເອນກໍລົງມາຈາກພູເຂົາດ້ວຍກັນກັບລາວ, ແລະ ລາວກໍໄດ້ນຳຄົນເຫລົ່ານັ້ນໄປ.
28ລາວໄດ້ກ່າວກັບພວກເຂົາວ່າ, "ຈົ່ງຕາມເຮົາໄປເຖີດ, ເພາະວ່າພຣະຢາເວກຳລັງຈະເອົາຊະນະສັດຕຣຂອງພວກເຈົ້າ, ຄືຊົນຊາດໂມອາບ".
ພວກເຂົາໄດ້ຕິດຕາມລາວໄປ ແລະ ຍຶດຟັງຂອງແມ່ນ້ຳຈໍແດນຂ້ວາມຜ່ານຈາກໂມອາບ, ແລະ ພວກເຂົາບໍ່ຍອມໃຫ້ໃຜເລີຍຂ້ວາມນ້ຳໄປໄດ້. 29ໃນ
ເວລານັ້ນ ພວກເຂົາປະຫານຄົນໂມອາບປະມານຫນຶ່ງຫມື່ນຄົນ, ແລະ ທຸກຄົນລ້ວນແຕ່ເປັນຄົນເຂັ້ມແຂງ ແລະ ມີຄວາມສາມາດ. ບໍ່ມີໃຜ
ຫລົບຫນີໄດ້. 30ສະນັ້ນ ໃນມື້ນັ້ນໂມອາບຈຶ່ງພ່າຍແພ້ໂດຍກຳລັງຂອງອິສະຣາເອນ ແລະ ແຜ່ນດິນນັ້ນ ໄດ້ສະຫງົບສຸກເປັນເວລາແປດສິບປີ.
31ຫລັງຈາກເອຮຸດ ຜູ້ປົກຄອງຄົນຕໍ່ໄປແມ່ນຊຳຄາລູກຊາຍຂອງອານາດ ຜູ້ທີ່ຂ້າຄົນຟີລິດສະຕິນຫົກຮ້ອຍຄົນ ດ້ວຍໄມ້ຄອັນເທົ້າທີ່ໃຊ້ລ້ຽງງົວ.
ລາວຍັງໄດ້ປົດປ່ອຍອິສະຣາເອນໃຫ້ພົ້ນຈາກອັນຕະລາຍ.


generated on Tue Jun 17 19:01:42 2025

# 4

[1]ຫລັງຈາກເອຮຸດເສຍຊີວິດແລ້ວ, ຄົນອິສະຣາເອນກໍເຮັດສິ່ງທີ່ຊົ່ວຮ້າຍອີກຕໍ່ໄປໃນຕາຂອງພຣະຢາເວ.[2]ພຣະຢາເວ ໄດ້ຊົງຂາຍພວກເຂົາໄວ້ໃຕ້
ອຳນາດຂອງຢາບິນກະສັດແຫ່ງການາອານ ທີ່ເປັນຜູ້ປົກຄອງຢູ່ໃນເມືອງຮາໂຊ. ຜູ້ບັນຊາແມ່ທັບຂອງເພິ່ນຊື່ວ່າ ສີເສຣາ,ແລະ ເພິ່ນໄດ້ອາໄສຢູ່-
ເມືອງຮາໂຣເຊັດຂອງຄົນຕ່າງຊາດ.[3]ຄົນອິສະຣາເອນໄດ້ຮ້ອງຂໍ ຫາພຣະຢາເວ ເພື່ອຂໍຄວາມຊ່ວຍເຫລືອ, ເພາະວ່າ ສີເສຣາ ມີລົດຮົບເຫລັກ
ເກົ້າຮ້ອຍຄັນ ແລະ ລາວໄດ້ບີບບັງຄັບຂົ່ມເຫັງຄົນອິສະຣາເອນດ້ວຍກຳລັງ ເປັນເວລາຊາວປີ.

[4]ໃນເວລານັ້ນ ນາງເດໂບຣາ, ຜູ້ເຜີຍພຣະຄັມ (ເມຍຂອງລັບປີໂດດ), ເປັນຜູ້ນຳພາການຕັດສິນການປົກຄອງໃນອິສະຣາເອນ.[5]ນາງເຄີຍນັ່ງຢູ່ກ້ອງ
ຕົ້ນຕານຂອງເດໂບຣາ ຢູ່ລະຫວ່າງເມືອງຣາມາ ແລະ ເມືອງເບັດເອນ ໃນເຂດເນີນພູແຫ່ງເອຟຣາອິມ, ແລະ ຄົນອິສະຣາເອນ ກໍມາຫານາງ ເພື່ອ
ໃຫ້ນາງແກ້ໄຂຂໍ້ຂັດແຍ້ງຂອງພວກເຂົາ.
[6]ນາງໄດ້ສົ່ງບາຣາກ ລູກຊາຍຂອງອາບີໂນອາມ ທີ່ມາຈາກເມືອງເກເດັດໃນແຂວງເນັບທາລີ. ນາງກ່າວວ່າ, "ພຣະຢາເວ, ພຣະເຈົ້າຂອງອິສະ
ຣາເອນ, ໄດ້ຊົງສັ່ງແກ່ເຈົ້າວ່າ, ຈົ່ງໄປທີ່ພູຕາໂບ, ແລະ ເກນເອົາພວກຜູ້ຊາຍສິບພັນຄົນຈາກເມືອງເນັບທາລີ ແລະ ເຊບູໂລນ ໄປກັບພວກເຈົ້າ.
[7]ສ່ວນເຮົາຈະເຮັດໃຫ້ສີເສຣາ, ຜູ້ບັນຊາການແມ່ທັບຂອງຢາບິນ ມາພົບເຈົ້າຢູ່ແມ່ນ້ຳກີໂຊນ, ພ້ອມດ້ວຍລົດຮົບ ແລະ ກອງທັບຂອງທ່ານ, ແລະ
ເຮົາຈະໃຫ້ໄຊຊະນະແກ່ເຈົ້າ."
[8]ບາຣາກ ໄດ້ເວົ້າຕໍ່ນາງວ່າ, "ຖ້າເຈົ້າໄປກັບຂ້ອຍ, ຂ້ອຍຈະໄປ, ແຕ່ວ່າເຈົ້າຈະບໍ່ໄປກັບຂ້ອຍ, ຂ້ອຍຈະບໍ່ໄປ"[9]ນາງກ່າວວ່າ, "
ຂ້ອຍຈະໄປກັບເຈົ້າຢ່າງແນ່ນອນ. ເຖິງຢ່າງໃດກໍຕາມ, ເສັ້ນທາງທີ່ເຈົ້າຈະໄປຈະບໍ່ນຳໄປສູ່ກຽດສັກສີຂອງເຈົ້າ, ເພາະວ່າພຣະຢາເວ ຈະຊົງຂາຍ
ສີເສຣາໄວ້ໃນກຳມືຂອງແມ່ຍິງຄົນຫນຶ່ງ" ແລ້ວນາງເດໂບຣາກໍລຸກໄປກັບບາຣາກເຖິງເມືອງເກເດັດ.
[10]ບາຣາກໄດ້ເອີ້ນພວກຄົນຈາກເຊບູໂລນ ແລະ ເນັບທາລີ ໃຫ້ເຕົ້າໂຮມກັນທີ່ເມືອງກາເດັດ. ສິບພັນຄົນຕິດຕາມລາວ, ແລະ ນາງເດໂບຣາກໍ
ໄປກັບລາວ.
[11]ໃນຂະນະນັ້ນ ເຮເບ (ຄົນເກນິດ) ໄດ້ແຍກຕົວອອກຈາກຄົນເກນິດ ເພາະເພິ່ນໄດ້ແຍກຫນີຈາກພວກເກນິດທີ່ເປັນເຊື້ອສາຍໂຮບັບ ຜູ້ເປັນ(ພໍ່ເຖົ້າ
ຂອງໂມເຊ) ແລະ ເຂົາໄດ້ຕັ້ງຕູບຜ້າເຕັນຂອງລາວໃກ້ຕົ້ນໂອ໊ກໃນຊາອານັນນິມ ໃກ້ເມືອງເກເດັດ.
[12]ເມື່ອພວກເຂົາບອກສີເສຣາວ່າ, "ບາຣັກລູກຊາຍຂອງອາບີໂນອາມໄດ້ຂຶ້ນໄປເຖິງພູຕາໂບແລ້ວ."[13]ສ່ວນສີເສຣາກໍເອີ້ນເອົາລົດຮົບທັງຫມົດ,
ຊຶ່ງເປັນລົດຮົບເຫລັກເກົ້າຮ້ອຍຄັນ, ແລະ ທະຫານທັງຫມົດທີ່ຢູ່ໃກ້ກັບລາວ, ຍົກທັບອອກຈາກເມືອງຮາໂຣເຊັດແຫ່ງ ຮາໂກຢິມຂອງຄົນຕ່າງຊາດ
ໄປເຖິງແມ່ນ້ຳກີໂຊນ.
[14]ນາງເດໂບຣາໄດ້ກ່າວຕໍ່ບາຣັກວ່າ, "ຈົ່ງອອກໄປ! ເພາະ ມື້ນີ້ເປັນມື້ທີ່ພຣະຢາເວ ຊົງມອບໄຊຊະນະແກ່ເຈົ້າເຫນືອ ສີເສ-
ຣາ. ພຣະຢາເວບໍ່ໄດ້ຊົງນຳຫນ້າເຈົ້າບໍ່?". ດັ່ງນັ້ນ ບາຣາກໄດ້ລົງຈາກພູເຂົາຕາໂບ ພ້ອມດ້ວຍທະຫານສິບພັນຄົນຕິດຕາມລາວໄປ.
[15]ພຣະຢາເວ ໄດ້ຊົງເຮັດໃຫ້ກອງທະຫານຂອງສີເສຣາ ສັບສົນ, ພ້ອມທັງລົດຮົບທັງຫມົດຂອງເຂົາ ແລະ ກອງທະຫານທັງລົດ-
ຮົບຂອງເຂົາກໍມີວຸ້ນວາຍເຊັ່ນກັນ. ຄົນຂອງບາຣັກ ໄດ້ໂຈມຕີພວກເຂົາ ແລະ ສີເສຣາຈຶ່ງລົງອອກຈາກລົດຮົບ ແລະແລ່ນຫນີໄປ.[16]ແຕ່ບາຣາກໄດ້
ໄລ່ຕິດຕາມລົດຮົບ ແລະກອງທະຫານໄປ ຈົນຮອດເມືອງຮາໂຣເຊັດແຫ່ງຮາໂກຢິມຂອງຄົນຕ່າງຊາດ, ແລະ ກອງທະຫານຂອງສີເສຣາທັງ
ຫມົດໄດ້ຖືກຂ້າຕາຍດ້ວຍຄົມດາບ, ແລະ ບໍ່ເຫລືອຈັກຄົນ.
[17]ສ່ວນສີເສຣາ ໄດ້ແລ່ນຫນີໄປທີ່ຕູບຜ້າເຕັນຂອງນາງຢາເອນ ເມຍຂອງເຮເບຊາວເກນິດ, ເພາະວ່າມີຄວາມສະຫງົບສຸກລະຫວ່າງ ທ່ານຜູ້ນີ້
ພ້ອມທັງຄອບຄົວເຄີຍຜູກສຳພັນກັບຢາບິນກະສັດແຫ່ງຮາໂຊ, ແລະ ວົງວານຂອງເຮເບຄົນເຄນີ.[18]ນາງຢາເອນໄດ້ອອກໄປພົບສີເສຣາ ແລະ ເວົ້າ
ກັບລາວວ່າ, "ເຊີນຫັນມາທາງນີ້, ເຈົ້ານາຍຂອງຂ້ອຍ; ຫັນມາທາງຂ້ອຍ ແລະ ບໍ່ຕ້ອງຢ້ານຫຍັງເລີຍ". ດັ່ງນັ້ນ ລາວຈຶ່ງຫັນໄປຫານາງ ແລະ
ເຂົ້າໄປໃນຕູບຜ້າເຕັນຂອງນາງ, ແລະ ນາງຈຶ່ງປົກຄຸມຕົວລາວດ້ວຍຜ້າຫົ່ມ.
[19]ລາວໄດ້ເວົ້າຕໍ່ນາງວ່າ, "ຂໍໃຫ້ຂ້ອຍດື່ມນ້ຳແດ່ ເພາະວ່າຂ້ອຍຫິວນ້ຳຫລາຍ" ນາງຈຶ່ງເປີດກະຖົງຫນັງທີ່ໃສ່ນ້ຳນົມ ແລະໃຫ້ລາວດື່ມ, ແລະ
ຫລັງຈາກນັ້ນ ນາງກໍປົກຄຸມລາວອີກ.[20]ລາວເວົ້າກັບນາງອີກວ່າ, " ຂໍໃຫ້ຢືນຢູ່ທາງເຂົ້າຜ້າເຕັນ, ຖ້າມີຄົນມາຖາມເຈົ້າວ່າ ມີໃຜຢູ່ທີ່ນີ້ບໍ? ໃຫ້ບອກ
ເຂົາວ່າ ບໍ່ມີ."
[21]ຫລັງຈາກນັ້ນ, ນາງຢາເອນ (ເມຍຂອງເຮເບ) ໄດ້ເອົາຂໍເຫລັກຂອງຜ້າເຕັນ ແລະຄ້ອນຕີອັນຫນຶ່ງຢູ່ໃນມືຂອງລາວ ແລະ
ໄດ້ແອບເຂົ້າໄປຫາລາວຢ່າງລັບໆ, ເພາະລາວນອນຫລັບສະຫນິດ, ແລະ ນາງກໍເອົາຄ້ອນຕີຕອກຂໍເຫລັກຕູບຜ້າເຕັນໃສ່ຂະຫມັບຂອງລາວຈົນ
ຊອດຮອດຂີ້ດິນ, ແລະລາວໄດ້ເສຍຊີວິດ.[22]ໃນຂະນະທີ່ ບາຣັກມາຊອກຫາສີເສຣາ, ນາງຢາເອນກໍອອກໄປພົບລາວ ແລະເວົ້າກັບລາວວ່າ "ເຊີນ
ມາທາງນີ້ ຂ້ານ້ອຍຈະຊີ້ໃຫ້ທ່ານເຫັນຜູ້ທີ່ທ່ານກຳລັງຊອກຫາ" ດັ່ງນັ້ນ ລາວຈຶ່ງເຂົ້າໄປກັບນາງ ແລະພົບສີເສຣານອນຕາຍຢູ່ທີ່ນັ້ນ, ໂດຍມີຂໍ
ຫລັກສຽບຂະຫມັບຂອງລາວ.
[23]ດັ່ງນັ້ນ ໃນມື້ນັ້ນ ພຣະເຈົ້າຊົງເຮັດໃຫ້ເຈົ້າຊີວິດຢາບິນພ່າຍແພ້, ຕໍ່ຫນ້າຄົນການາອານ.[24]ກຳລັງຂອງຄົນອິສະຣາເອນໄດ້ເຂັ້ມແຂງຂຶ້ນ ແລະ
ເຂັ້ມແຂງຂຶ້ນຕໍ່ສູ້ກັບຢາບິນ ເຈົ້າຊີວິດແຫ່ງການາອານ ຈົນພວກເຂົາໄດ້ທຳລາຍພຣະອົງເສຍສິ້ນ.

 generated on Tue Jun 17 19:01:42 2025

5 [1]ໃນມື້ນັ້ນ ນາງເດໂບຣາ ແລະບາຣັກຜູ້ເປັນລູກຊາຍຂອງອາບີໂນອາມໄດ້ຮ້ອງເພງນີ້ວ່າ,[2]ເມື່ອພວກຜູ້ນຳໄດ້ນຳຫນ້າອິສະຣາເອນ,
ເມື່ອປະຊາຊົນອາສາສະຫມັກໄປສູ້ຮົບເສິກດ້ວຍຄວາມຍິນດີພວກເຮົາຂໍສັນຣະເສີນພຣະອົງ!

[3]ທ່ານກະສັດທັງຫລາຍຈົ່ງຟັງເຖີ້ນ! ແລະເຈົ້າຜູ້ນຳທັງຫລາຍຈົ່ງຟັງດ້ວຍ! ຂ້ານ້ອຍຈະຮ້ອງເພງຖວາຍແດ່ພຣະຢາເວ,
ຂ້ານ້ອຍຈະຮ້ອງເພັງສັນຣະເສີນແດ່ພຣະຢາເວ, ພຣະເຈົ້ຂອງອິສະຣາເອນ.[4]ຂ້າແດ່ພຣະຢາເວ ເມື່ອພຣະອົງສະເດັດມາຈາກພູເສອີ,
ເມື່ອພຣະອົງໄດ້ສະເດັດອອກມາຈາກເຂດເມືອງເອໂດມນັ້ນ, ແຜ່ນດິນກໍສັ່ນສະເທືອນ, ທ້ອງຟ້າກໍສັ່ນສະເທືອນ, ກ້ອນເມກ
ກໍໄດ້ຖອກເທນ້ຳຝົນລົງມາ.
[5]ພູເຂົາໄດ້ສັ່ນໄຫວຕໍ່ຫນ້າພຣະຢາເວ; ແມ່ນແຕ່ພູຊີນາຍກໍສັ່ນໄຫວຕໍ່ຫນ້າພຣະຢາເວ, ພຣະເຈົ້າຂອງພວກອິສະຣາເອນ.[6]ໃນສະໄຫມຂອງຊຳ-
ຄາ (ລູກຊາຍຂອງອານາດ), ໃນສະໄຫມຂອງຢາເອນ, ເສັ້ນທາງຫລວງຕ່າງໆ ກໍຖືກປະຖິ້ມ, ແລະ ຄົນເຫລົ່ານັ້ນຜູ້ທີ່ເຄີຍສັນຈອນໄປມາກໍຫຽວ
ທາງໂຄ້ງເທົ່ານັ້ນ.
[7]ໃນອິສະຣາເອນ ມີນັກຮົບບໍ່ເທົ່າໃດຄົນ, ຈົນກວ່າ ຂ້ານ້ອຍເດໂບຣາ ໄດຮັບພຣະບັນຊາ ຜູ້ເປັນແມ່ຄົນຫນຶ່ງ ໄດ້ຮັບພຣະບັນຊາໃນພວກອິສະ
ຣາເອນ.[8]ເມື່ອພວກເຂົາໄດ້ເລືອກນັບຖືພຣະໃຫມ່, ໄດ້ມີການຕໍ່ສູ້ກັນທີ່ປະຕູເມືອງ ແລະ ແຕ່ວ່າບໍ່ມີໂລ້ ຫລືຫອກທີ່ເຫັນ ໃນຈຳນວນພວກຜູ້ຊາຍ
ອິສະຣາເອນສີ່ສິບພັນຄົນນີ້.
[9]ຈິດໃຈຂອງຂ້ານ້ອຍ ອອກໄປຫາຜູ້ບັນຊາການຂອງອິສະຣາເອນ, ພ້ອມກັບປະຊາຊົນທີ່ອາສາສະຫມັກດ້ວຍຄວາມຍິນດີ ພວກເຮົາຈົ່ງສັນຣະ-
ເສີນພຣະຢາເວສຳລັບພວກເຂົາ.[10]ຈົ່ງຄິດເຖິງເລື່ອງນີ້ ພວກທ່ານຜູ້ທີ່ຂີ່ລໍສີຂາວ ທີ່ນັ່ງຢູ່ເທິງອານ, ແລະ ພວກທ່ານຜູ້ທີ່ຍ່າງໄປມາຕາມເສັ້ນທາງ.
[11]ຈົ່ງຟັງສຽງຂອງຄົນເຫລົ່ານັ້ນ ທີ່ຮ້ອງເພງຢູ່ສະຖານທີ່ຕັກນ້ຳ. ທີ່ນັ້ນພວກເຂົາບອກອີກເທື່ອຫນຶ່ງເຖິງພົນທະກິດທີ່ຊອບທັມຂອງພຣະຢາເວ, ແລະ
ການກະທຳທີ່ຊອບທັມຂອງພວກນັກຮົບຂອງພຣະອົງໃນອິສະຣາເອນ. ແລ້ວພວກໄພ່ພົນຂອງພຣະຢາເວ ກໍພາກັນຍ່າງລົງໄປທີ່ປະຕູເມືອງນັ້ນ.
[12]ຈົ່ງຕື່ນເຖີ້ນ, ຕື່ນຂຶ້ນເຖີ້ນ, ນາງເດໂບຣາ! ຈົ່ງຕື່ນເຖີ້ນ, ຕື່ນຂຶ້ນມາຮ້ອງເພງ! ຈົ່ງຕື່ນເຖີ້ນ, ບາຣັກລູກຊາຍຂອງອາບີໂນ-
ອາມເອີຍ, ຈັບເອົາພວກຊະເລີຍຂອງທ່ານອອກໄປ.[13]ແລ້ວຜູ້ລອດຊີວິດ ໄດ້ລົງມາຫາບັນດາຜູ້ມີກຽດສັກສີ; ພວກໄພ່ພົນຂອງພຣະຢາເວ ກໍຟ້າວ
ເຂົ້າມາຂ້ານ້ອຍພ້ອມດ້ວຍພວກຮົບ.
[14]ພວກເຂົາມາຈາກເອຟຣາອິມ, ຜູ້ທີ່ຮາກເຫງົ້າຂອງພວກເຂົາຢູ່ໃນອາມາເຫລັກ; ຄົນເບັນຢາມິນໄດ້ຕິດຕາມທ່ານໄປ.
ຈາກຜູ້ບັນຊາການໄດ້ລົງມາຈາກມາກີ, ແລະຄົນເຫລົ່ານັ້ນ ຜູ້ຊຶ່ງຖືທຸງຂອງນາຍທະຫານນາຍທະຫານມາຈາກເຊບູໂລນ.
[15]ພວກຜູ້ນຳຂອງຂ້ານ້ອຍໃນເຜົ່າອິດຊາຄາ ກໍມານຳເດໂບຣາ; ແລະ ອິດຊາຄາ ໄດ້ຢູ່ກັບບາຣາກ ຊຶ່ງຕິດຕາມເຂົາເຂົ້າໄປໃນຮ່ອມ-
ພູພາຍໃຕ້ຄຳສັ່ງຂອງເຂົາ. ມີການຕັດສິນໃຈຄັ້ງຍິ່ງໃຫ່ຍທ່າມກາງຕະກູນຕ່າງໆຂອງຣູເບັນ.
[16]ເປັນຫຍັງພວກເຈົ້າຈຶ່ງນັ່ງຢູ່ລະຫວ່າງເຕົາໄຟ, ເພື່ອຟັງຄົນລ້ຽງແກະເປົ່າແກເອີ້ນຝູງສັດຂອງພວກເຂົາຟັງ? ສ່ວນຕະກູນຣູເບັນຕ່າງໆ ໄດ້ມີການ
ຕັດສິນໃຈຄັ້ງຍິ່ງໃຫ່ຍ.
[17]ສ່ວນກີເລອາດນັ້ນໄດ້ອາໄສຢູ່ອີກຟາກຫນຶ່ງຂອງແມ່ນ້ຳ ຈໍແດນ; ແລະດານ, ເປັນຫຍັງລາວຈຶ່ງຂີ່ເຮືອໄປ? ອາເຊຍັງຄົງຢູ່ຕາມແຄມທະເລ
ແລະອາໄສຢູ່ໃກ້ທ່າເຮືອຂອງພວກເຂົາ.[18]ເຊບູໂລນເປັນເຜົ່າທີ່ສ່ຽງຊີວິດຂອງພວກເຂົາທີ່ນຳໄປສູ່ຄວາມຕາຍ, ແລະເນັບທາລີ, ກໍເຊັ່ນກັນ, ຢູ່ຕາມ
ສະຫນາມຮົບ.
[19]ບັນດາເຈົ້າຊີວິດໄດ້ມາ, ພວກເຂົາກໍໄດ້ສູ້ຮົບກັນ; ເຈົ້າຊີວິດທັງຫລາຍຂອງການາອານໄດ້ສູ້ຮົບທີ່ຕານາກໃກ້ນ້ຳຫ້ວຍເມກິດໂດ. ແຕ່ພວກເຂົາບໍ່-
ໄດ້ຍຶດເອົາເງິນຄຳໄປນຳ.[20]ເຫລົ່າດວງດາວ ໄດ້ສູ້ຮົບຈາກທ້ອງຟ້າ, ຈາກວິທີຂອງດາວເຫລົ່ານັ້ນ ຂ້ວາມຜ່ານທ້ອງຟ້າ ດາວເຫລົ່ານັ້ນໄດ້ສູ້ຮົບກັບ
ສີເສຣາ.
[21]ແມ່ນ້ຳກີໂຊນໄດ້ພັດກວາດລ້າງພວກເຂົາອອກໄປ, ຊຶ່ງເປັນສາຍນ້ຳດັ້ງເດີມ, ແມ່ນ້ຳກີໂຊນ. ຈົ່ງເດີນຫນ້າໄປຈິດວິນຍານຂອງຂ້ອຍ,
ຈົ່ງເຂັ້ມແຂງເຖີ້ນ.[22]ແລ້ວສຽງຄ້ອງມ້າທັງຫລາຍທີ່ກຳລັງແລ່ນມາ, ການແລ່ນມາຂອງບັນດາຜູ້ເກັ່ງກ້າຂອງເຂົາ.
[23]ສາບແຊ່ງເມໂຣດ! ທູດສະຫວັນຂອງພຣະຢາເວໄດ້ກ່າວວ່າ 'ແນ່ນອນ ຈົ່ງສາບແຊ່ງຜູ້ອາໄສຢູ່ໃນເມືອງນັ້ນ ເພາະພວກເຂົາບໍ່ໄດ້ມາຊ່ວຍຝ່າຍ
ພຣະຢາເວ, ເພື່ອຊ່ວຍພຣະຢາເວ ໃນການສູ້ຮົບກັບພວກນັກຮົບທີ່ເກັ່ງກ້າ'.
[24]ນາງຢາເອນ ໄດ້ຮັບພຣະພອນຫລາຍກວ່າຍິງອື່ນໆທັງຫມົດ, ຢາເອນ (ເມຍຂອງເຮເບຄົນເກນິດ) ນາງໄດ້ຮັບການສັນຣະເສີນຍິ່ງກວ່າຜູ້-
ຍິງທັງຫມົດທີ່ຢູ່ອາໄສຢູ່ໃນຕູບຜ້າເຕັນ.[25]ຊາຍຄົນນັ້ນໄດ້ຂໍດື່ມນ້ຳ, ແລະ ນາງຢາເອນກໍເອົານ້ຳນົມໃຫ້ດື່ມແທນ;
ນາງໄດ້ເອົາເນີຍໃສ່ຈານອັນສວຍງາມ ສຳລັບເຈົ້າຊາຍ.
[26]ນາງໄດ້ຂໍຂອງເຕັນໄວ້ໃນມືຂອງນາງ, ແລະມືຂວາຂອງນາງໄດ້ຖືໄມ້ຄ້ອນຕີ; ນາງໄດ້ຂ້າສີເສຣາດ້ວຍຄ້ອນຕີອັນນັ້ນ, ນາງຕີສີເສຣາຈົນຫົວ
ແຕກ. ນາງແທງຂະຫມັບຈົນຊອດຫົວຂອງລາວໄປອີກຂ້າງຫນຶ່ງ.[27]ສ່ວນສີເສຣາກໍລົ້ມລົງ ຢູ່ລະຫວ່າງຕີນຂອງນາງ, ສີເສຣາລົ້ມລົງ
ແລະນອນຢູ່ບ່ອນນັ້ນ. ລາວຢູ່ລະຫວ່າງຕີນຂອງນາງ. ສະຖານທີ່ລາວລົ້ມລົງເປັນທີ່ຊຶ່ງເຂົາໄດ້ຖືກຂ້າຢ່າງທາລຸນ.
[28]ແມ່ຂອງສີເສຣາກໍຫລຽວອອກມາທາງປ່ອງຢ້ຽມແມ່ຂອງ ລາວຈອບເບິ່ງຜ່ານຊ່ອງຂອງຕາຫນ່າງອອກໄປ
ແລະນາງຮ້ອງໃຫ້ດ້ວຍຄວາມໂສກເສົ້າໃຈ, “ເປັນຫຍັງລົດຮົບຂອງສີເສຣາຈຶ່ງມາຊ້າແທ້? ເປັນຫຍັງສຽງຄ້ອງມ້າຂອງລາວຈຶ່ງນານກັບມາແທ້?”
[29]ບັນດາເຈົ້າຍິງທີ່ແສນສະຫລາດ ນາງຕອບວ່າ, ແລະນາງກໍໃຫ້ຄຳຕອບກັບຕົວເອງຢູ່ເຫມືອນກັນ.[30]“ພວກເຂົາອາດບໍ່ໄດ້ພົບເຫັນ ແລະ ຍັງບໍ່ໄດ້
ແບ່ງປັນຂອງທີ່ລັກມາ ຫລືບໍ່? ຜູ້ຍິງຫນຶ່ງຄົນ, ສອງຄົນສຳລັບຜູ້ຊາຍທຸກຄົນ; ຂອງທີ່ໄດ້ລັກມາທີ່ເປັນເສື້ອຜ້າສຳລັບສີເສຣາ,
ຂອງທີ່ລັກມາທີ່ເປັນຍ້ອມສີແສ່ວລວດລາຍ, ຜ້າຍ້ອມສີທີ່ແສ່ວລວດລາຍສອງຜືນສຳລັບຄໍອງຄໍຂອງຜູ້ທີ່ລັກມາບໍ່”.
[31]ດັ່ງນັ້ນ ຂ້າແດ່ພຣະຢາເວ ຂໍໃຫ້ສັດຕຣູທັງສິ້ນຂອງພຣະອົງຈົ່ງຈິບຫາຍໄປ, ແຕ່ບັນດາຜູ້ທີ່ເປັນມິດຂອງພຣະອົງ
ຈະເປັນເຫມືອນດັ່ງກັບດວງອາທິດຂຶ້ນໃນແສງແຮງກ້າ"ແລ້ວແຜ່ນດິນນີ້ ໄດ້ມີຄວາມສະຫງົບສຸກ ເປັນເວລາສີ່ສິບປີ".


generated on Tue Jun 17 19:01:42 2025

6 1ຄົນອິສະຣາເອນໄດ້ເຮັດບາບໃນສາຍຕາຂອງພຣະຢາເວ, ແລະພຣະອົງໄດ້ຊົງມອບພວກເຂົາໄວ້ໃນກຳມືຂອງຄົນມີດີອານເປັນເວລາເຈັດປີ.
2ຝ່າຍຜູ້ມີອຳນາດຂອງຄົນມີດີອານກໍໄດ້ກົດຂີ່ຄົນອິສະຣາເອນ. ເພາະວ່າຄົນມີດີອານ, ຄົນອິສະຣາເອນ
ຈຶ່ງຕ້ອງສ້າງທີ່ພັກອາໄສສຳລັບພວກເຂົາເອງ ຕາມທີ່ຫລົບລີ້ຕ່າງໆໃນຮ່ອມພູ, ໃນຖ້ຳຕ່າງໆ ແລະໃນບ່ອນທີ່ກຳລັງເຂັ້ມແຂງຕ່າງໆ.

3ເຫດການໄດ້ບັງເກີດຂຶ້ນທຸກເທື່ອທີ່ຄົນອິສະຣາເອນຫວ່ານພືດຂອງເຂົາເຈົ້າ, ຄົນມີດີອານ ແລະຄົນອາມາເຫລັກ
ແລະຄົນມາຈາກທິດຕາເວັນອອກ ກໍມາບຸກໂຈມຕີຄົນອິສະຣາເອນ.4ພວກເຫລົ່ານີ້ພາກັນຕັ້ງຄ້າຍພັກຂອງພວກເຂົາຢູ່ແຜ່ນດິນນັ້ນ ແລະທຳລາຍ
ຜົນລະປູກຕ່າງໆ, ຕະຫລອດທາງໄປເຖິງເມືອງກາຊາ. ພວກເຂົາບໍ່ໄດ້ປະອາຫານໃດເລີຍເຫລືອໄວ້ໃຫ້ ຄົນອິສະຣາເອນ, ແລະບໍ່ມີຝຸງແກະ ຫລື
ບໍ່ມີຝຸງງົວ ຫລື ຝູງລໍ.
5ເມື່ອໃດກໍຕາມພວກເຂົາ ແລະຝູງສັດລ້ຽງ ແລະ ຕູບຜ້າເຕັນຂອງພວກເຂົາຂຶ້ນມາ, ພວກເຂົາກໍໄດ້ບຸກເຂົ້າມາເຫມືອນດັ່ງຝູງຕັກແຕນ,
ແລະບໍ່ສາມາດນັບປະຊາຊົນ ຫລື ອູດຂອງພວກເຂົາໄດ້. ພວກເຂົາບຸກເຂົ້າມາ ເພື່ອທຳລາຍແຜ່ນດິນນັ້ນ.6ຍ້ອນຄົນມີດີອານທຳລາຍ ຄົນອິສະ
ຣາເອນຈຶ່ງອ່ອນກຳລັງລົງຫລາຍ ຈົນຄົນອິສະຣາເອນພາກັນຮ້ອງທູນຂໍຄວາມຊ່ວຍເຫລືອຕໍ່ຈາກພຣະຢາເວ.
7ເມື່ອຄົນອິສະຣາເອນຮ້ອງທູນຕໍ່ພຣະຢາເວ ຍ້ອນການຮຸກຮານຂອງຄົນມີດີອານນັ້ນ.8ພຣະຢາເວກໍຊົງໃຊ້ຜູ້ປະກາດພຣະທັມຜູ້ຫນຶ່ງມາບອກຄົນ
ອິສະຣາເອນ. ຜູ້ປະກາດພຣະຄັມຄົນນັ້ນກ່າວກັບພວກເຂົາວ່າ “ ນີ້ຄືຖ້ອຍຄຳພຣະຢາເວ, ພຣະເຈົ້າຂອງຄົນອິສະຣາເອນ, ຊົງກ່າວວ່າ': ເຮົາໄດ້
ນຳພວກເຈົ້າອອກມາຈາກປະເທດອີຢິບ; ເຮົາໄດ້ນຳພວກເຈົ້າອອກຈາກເຮືອນຂອງຂ້າທາດ.
9ເຮົາໄດ້ຊ່ອຍຊີວິດຂອງພວກເຈົ້າອອກຈາກເງື້ອມມືພວກອີຢິບ, ແລະອອກຈາກມືທຸກຄົນຜູ້ທີ່ກົດຂີ່ຂົ່ມເຫັງພວກເຈົ້າ. ເຮົາໄດ້ໄລ່ພວກເຂົາຫນີ
ອອກຈາກພວກເຈົ້າ ແລະເຮົາໄດ້ມອບດິນແດນຂອງພວກເຂົາໃຫ້ແກ່ພວກເຈົ້າ.10ເຮົາບອກກັບພວກເຈົ້າວ່າ, "ເຮົາແມ່ນພຣະຢາເວ ພຣະເຈົ້າ
ຂອງພວກເຈົ້າ; ເຮົາໄດ້ບັນຊາພວກເຈົ້າບໍ່ໃຫ້ນະມັດສະການພຣະຕ່າງໆ ຂອງພວກອະໂມຣິດ, ຊຶ່ງພວກເຈົ້າກຳລັງອາໃສຢູ່ໃນດິນ-
ແດນຂອງພວກເຂົາຢູ່". ແຕ່ວ່າພວກເຈົ້າບໍ່ໄດ້ເຊື່ອຟັງສຽງຂອງເຮົາເລີຍ.”
11ໃນຂະນະນັ້ນທູດສະຫວັນຂອງພຣະຢາເວໄດ້ມາ ແລະນັ່ງຢູ່ກ້ອງຕົ້ນໂອ໊ກໃກ້ບ້ານໂອຟະຣາ, ຊຶ່ງເປັນບ້ານຂອງໂຢອາດ (ຄົນອາບີເອເຊ)
ໃນຂະນະທີ່ກີເດໂອນ, ລູກຊາຍຂອງໂຢອາດ ກຳລັງແຍກເມັດສາລີ ໂດຍຟາດມັນລົງພື້ນ, ໃນບ່ອນບີບນ້ຳອະງຸ່ນ ເພື່ອເຊື່ອງເມັດສາລີຈາກພວກ
ມີດີອານ.12ທູດສະຫວັນຂອງພຣະຢາເວ ໄດ້ປະກົດຕໍ່ເຂົາ ແລະເວົ້າກັບເຂົາວ່າ, “ພຣະຢາເວ ຊົງສະຖິດຢູ່ກັບທ່ານ, ທ່ານນັກຮົບຜູ້ກ້າຫານ”.
13ຝ່າຍກີເດໂອນຈຶ່ງເວົ້າຕໍ່ທູດອົງນັ້ນວ່າ, “ ໂອ້, ເຈົ້ານາຍຂອງຂ້ານ້ອຍ, ຖ້າພຣະຢາເວ ຊົງສະຖິດຢູ່ນຳພວກຂ້ານ້ອຍ, ເປັນຫຍັງ ເຫດຮ້າຍທັງ
ຫມົດນີ້ຈຶ່ງເກີດຂຶ້ນແກ່ພວກຂ້ານ້ອຍ? ແລະການອັດສະຈັນຕ່າງໆຂອງພຣະອົງທັງຫມົດ ທີ່ບັນພະບຸຣຸດຂອງພວກຂ້ານ້ອຍໄດ້ເລົ່າໃຫ້ພວກເຮົາຟັງ
ນັ້ນຢູ່ບ່ອນໃດ, ເມື່ອພວກເຂົາເວົ້າວ່າ, 'ພຣະຢາເວ ຊົງນຳຫນ້າພວກຂ້ານ້ອຍອອກມາຈາກປະເທດອີຢິບນັ້ນ ແມ່ນ ຫລື ບໍ່?'. ແຕ່ບັດນີ້ ພຣະ-
ຢາເວ ຊົງປະຖິ້ມພວກຂ້ານ້ອຍ, ແລະໄດ້ມອບພວກຂ້ານ້ອຍໄວ້ໃນມືຂອງຄົນມີດີອານ.”
14ພຣະຢາເວ ຈຶ່ງຊົງແນມເບິ່ງເຂົາ ແລະເວົ້າວ່າ, “ເຈົ້າໄປດ້ວຍກຳລັງທີ່ເຈົ້າມີຢູ່ແລ້ວ. ຈົ່ງໄປປົດປ່ອຍຄົນອິສະຣາເອນອອກຈາກກຳມືຂອງຂອງຄົນ
ມີດີອານ. ເຮົາໄດ້ສົ່ງເຈົ້າໄປ ຫລືບໍ່?”.15ກີເດໂອນໄດ້ທູນພຣະອົງວ່າ, “ຂໍອົງພຣະຜູ້ເປັນເຈົ້າຊົງກະລຸນນາຂ້ານ້ອຍ ຈະປົດປ່ອຍຄົນອິສະຣາເອນ
ໄດ້ຢ່າງໃດ? ເບິ່ງແມ, ຄອບຄົວຂອງຂ້ານ້ອຍ ແມ່ນອ່ອນແອທີ່ສຸດໃນເຜົ່າມານາເຊ, ແລະຂ້ານ້ອຍເອງກໍເປັນຄົນທີ່ມີຄວາມສຳຄັນຫນ້ອຍໃນເ
ຮືອນຂອງພໍ່ຂ້ານ້ອຍ.”
16ພຣະຢາເວ ຈຶ່ງຊົງກ່າວຕໍ່ເພິ່ນວ່າ, “ເຮົາຈະຢູ່ກັບເຈົ້າ ແລະເຈົ້າຈະຊະນະກອງທັບຄົນມີດີອານທັງຫມົດຄືກັບສູ້ຮົບກັບຄົນໆດຽວ.”17ກີເດໂອນ
ໄດ້ທູນພຣະອົງວ່າ, “ຖ້າຫາກພຣະອົງຊົງໂຜດເມດຕາຂ້ານ້ອຍ, ຂໍປະທານຫມາຍສຳຄັນວ່າພຣະອົງຊົງເປັນຜູ້ສັ່ງໃຫ້ແກ່ຂ້ານ້ອຍ.
18ຂໍຊົງໂຜດເມດຕາຢ່າຟ້າວສະເດັດຈາກບ່ອນນີ້ ຈົນກວ່າຂ້ານ້ອຍຈະນຳເອົາເຄື່ອງຖວາຍມາໃຫ້ແກ່ພຣະອົງ” ແລ້ວພຣະຢາເວຊົງກ່າວວ່າ, “ເຮົາ
ຈະພັກຢູ່ທີ່ນີ້ຈົນກວ່າເຈົ້າຈະກັບມາ.”
19ກີເດໂອນ ກໍໄດ້ໄປ ແລະ ກະກຽມແບ້ຫນຸ່ມ ແລະໄດ້ເຮັດເຂົ້າຈີ່ບໍ່ມີເຊື້ອແປ້ງ ຈາກແປ້ງຫນຶ່ງເອຟາ. ຕໍ່ມາເພິ່ນໄດ້ຈັດຊີ້ນໃສ່ກະຕ່າ, ແລະນ້ຳ
ແກງໃສ່ຫມໍ້ ແລະນຳເອົາສິ່ງເຫລົ່ານັ້ນມາມອບໃຫ້ທູດສະຫວັນຂອງພຣະຢາເວຢູ່ກ້ອງຕົ້ນສົນ.20ຝ່າຍທູດສະຫວັນຂອງພຣະອົງນັ້ນຈຶ່ງກ່າວແກ່
ເພິ່ນວ່າ, “ຈົ່ງເອົາຊີ້ນ ແລະ ເຂົ້າຈີ່ວາງໄວ້ເທິງໂງ່ນຫີນ ແລ້ວຖອກນ້ຳແກງລົງໃສ່”. ກີເດໂອນກໍເຮັດຕາມນັ້ນ.
21ທູດສະຫວັນຂອງພຣະຢາເວ ຊົງເອົາປາຍໄມ້ເທົ້າຂອງຕົນແຕະຕ້ອງຊີ້ນ ແລະເຂົ້າຈີ່ນັ້ນ ໃນທັນໃດນັ້ນ ໄຟໄດ້ລຸກຂຶ້ນຈາກໂງ່ນຫີນ ແລະໄຫມ້ຊີ້ນ
ກັບເຂົ້າຈີ່ຈົນຫມົດ ໂດຍບໍ່ມີເຊື້ອເຟືອງ. ຕໍ່ມາທູດສະຫວັນຂອງພຣະຢາເວກໍຫາຍຕົວໄປ ແລະ ກີເດໂອນ ກໍບໍ່ເຫັນເພິ່ນອີກເລີຍ.
22ກີເດໂອນກໍໄດ້ເຂົ້າໃຈວ່າ ນີ້ແມ່ນທູດສະຫວັນຂອງພຣະຢາເວ. ກີເດໂອນຈຶ່ງທູນວ່າ, ໂອ້, “ພຣະຢາເວຂອງຂ້ານ້ອຍເອີຍ! ຂ້ານ້ອຍໄດ້
ເຫັນທູດສະຫວັນຂອງພຣະຢາເວຕໍ່ຫນ້າແລ້ວ!”23ພຣະຢາເວຊົງບອກເພິ່ນວ່າ, “ສັນຕິສຸກຈົ່ງເກີດແກ່ເຈົ້າ! ຢ່າຢ້ານກົວເລີຍ, ເຈົ້າຈະບໍ່
ຕາຍ.”24ດັ່ງນັ້ນ ກີເດໂອນໄດ້ສ້າງແທ່ນບູຊາໃຫ້ພຣະຢາເວຢູ່ທີ່ນັ້ນ. ເຂົາເອີ້ນແທ່ນບູຊານີ້ວ່າ, “ພຣະຢາເວຄືຄວາມສະຫງົບສຸກ” ແທ່ນບູຊານີ້
ຍັງຄົງຕັ້ງຢູ່ທີ່ໂອຟຣາ ຂອງຕະກູນອາບີເອເຊຈົນເທົ່າທຸກວັນນີ້.
25ໃນຄືນນັ້ນ ພຣະຢາເວຊົງບອກເພິ່ນວ່າ “ຈົ່ງເອົາງົວເຖິກຂອງພໍ່ເຈົ້າໄປ ແລະງົວເຖິກໂຕທີສອງ ທີ່ມີອາຍຸເຈັດປີ, ແລະ ທຳລາຍແທ່ນບູຊາ
ຂອງພຣະບາອານທີ່ເປັນຂອງພໍ່ເຈົ້າ, ຈົ່ງຕັດເສົາອາເຊຣາທີ່ຢູ່ທາງຂ້າງນັ້ນອອກນຳ.26ຈົ່ງສ້າງແທ່ນບູຊາໃຫ້ພຣະເຢາເວຂອງເຈົ້າຢູ່ເທິງ
ບ່ອນສູງສຸດຂອງບ່ອນລີ້ໄພນີ້, ແລະກໍສ້າງແທ່ນນີ້ໃຫ້ຖືກວິທີ. ຈົ່ງຖວາຍງົວເຖິກໂຕທີສອງເປັນເຄື່ອງເຜົາບູຊາ,
ຈົ່ງໃຊ້ຟືນຈາກເສົາອາເຊຣາທີ່ເຈົ້າຕັດລົງນັ້ນ”
27ດັ່ງນັ້ນ ກີເດໂອນ ຈຶ່ງໄດ້ພາເອົາຄົນໃຊ້ຂອງລາວສິບຄົນໄປ ແລະປະຕິບັດຕາມພຣະຢາເວທີ່ຊົງບອກລາວ. ແຕ່ຍ້ອນວ່າ
ລາວຢ້ານຄົນໃນຄອບຄົວຂອງພໍ່ລາວ ແລະຄົນໃນເມືອງເຫັນຈຶ່ງບໍ່ໄດ້ເຮັດວຽກຕອນກາງເວັນ, ສະນັ້ນ ລາວຈຶ່ງເຮັດໃນເວລາກາງຄືນ.
28ໃນເວລາຕອນເຊົ້າ ເມື່ອຄົນໃນເມືອງນັ້ນໄດ້ລຸກແຕ່ເດິກ, ພວກເຂົາກໍໄດ້ເຫັນແທ່ນບູຊາຂອງພຣະບາອານໄດ້ຫັກລົງມາແລະເສົາອາເຊຣາ
ທີ່ຢູ່ທາງຂ້າງ ກໍຖືກຕັດລົງ,  ແລ້ວໄດ້ເຫັນງົວເຖິກທີ່ໄດ້ຖວາຍຢູ່ເທິງແທ່ນບູຊາໄດ້ສ້າງຂຶ້ນໃຫມ່ນັ້ນ.29ຄົນໃນເມືອງຈຶ່ງເວົ້າກັນວ່າ, “ແມ່ນໃຜເຮັດ
ສິ່ງນີ້?”ເມື່ອພວກເຂົາເວົ້າກັບຄົນອື່ນໆ ແລະ ສືບຖາມຫາຄຳຕອບ,ພວກເຂົາເວົ້າວ່າ"ກີເດໂອນລູກຊາຍຂອງໂຢອາດໄດ້ເປັນຜູ້ເຮັດສິ່ງນີ້".
30ຫລັງຈາກນັ້ນ ຄົນໃນເມືອງຈຶ່ງເວົ້າຕໍ່ໂຢອາດວ່າ, “ຈົ່ງເອົາລູກຊາຍຂອງເຈົ້າອອກມາ ເພື່ອລາວອາດຈະຖືກຂ້າຖິ້ມ, ເພາະລາວເປັນຜູ້ທຳລາຍ
ແທ່ນບູຊາຂອງພຣະບາອານ ແລະເພາະວ່າລາວໄດ້ຕັດເສົາອາເຊຣາຢູ່ທາງຂ້າງນັ້ນອອກ.”


generated on Tue Jun 17 19:01:42 2025

31ແຕ່ໂຢອາດໄດ້ເວົ້າກັບທຸກຄົນທີ່ມາຟ້ອງຕໍ່ລາວວ່າ, "ພວກເຈົ້າມາຟ້ອງຮ້ອງແທນພຣະບາອານບໍ? ພວກເຈົ້າປ້ອງກັນພຣະບາອານບໍ? ຖ້າເປັນຜູ້-
ໃດກໍຕາມຟ້ອງຮ້ອງແທນພຣະນັ້ນ, ຜູ້ນັ້ນຈະຖືກຂ້າຖິ້ມກ່ອນຮຸ່ງເຊົ້າ. ຖ້າພຣະບາອານເປັນພຣະເຈົ້າ, ຈົ່ງໃຫ້ເພິ່ນປ້ອງກັນຕົວເພິ່ນເອງເຖີ້ນ ເມື່ອ
ມີໃຜດຶງແທ່ນບູຊາຂອງເພິ່ນອອກ". 32ດ້ວຍເຫດຜົນນັ້ນ ໃນມື້ນັ້ນ ພວກເຂົາກໍເອີ້ນກີເດໂອນວ່າ" ເຢຣຸບບາອານ", ເພາະລາວໄດ້ເວົ້າວ່າ, "ຈົ່ງໃຫ້
ພຣະບາອານປ້ອງກັນຕົວເພິ່ນເອງ", ເພາະ ໄດ້ທຳລາຍແທ່ນບູຊາຂອງພຣະບາອານ.
33ດຽວນີ້ ບັນດາຄົນມີດີອານ ພ້ອມທັງຄົນອາມາເຫລັກ ແລະຊາວຕາເວັນອອກອອກມາເຕົ້າໂຮມກັນ. ພວກເຂົາ ກໍພາກັນຂ້ວາມແມ່ນ້ຳຈໍແດນ
ແລະຕັ້ງຄ້າຍພັກຢູ່ຮ່ອມພູ ຢິດຊະເຣນ.
34ແຕ່ພຣະວິນຍານຂອງພຣະຢາເວໄດ້ສະຖິດຢູ່ນຳກີເດໂອນ. ກີເດໂອນກໍເປົ່າແກເອີ້ນເອົາຕະກູນອາບີເອເຊ,
ສະນັ້ນພວກເຂົາອາດຕິດຕາມລາວໄປ35ລາວໄດ້ສົ່ງຄົນນຳຂ່າວໄປບອກທົ່ວເຂດແດນຂອງມານາເຊ,
ແລະພວກເຂົາກໍຖືກເອີ້ນໃຫ້ອອກໄປຕິດຕາມລາວດ້ວຍ. ລາວຍັງໄດ້ສົ່ງຄົນນຳຂ່າວໄປທີ່ເຜົ່າອາເຊ, ເຊບູໂລນ ແລະເນັບທາລີ,
ແລະພວກເຂົາກໍຂຶ້ນມາ ເພື່ອພົບກັບລາວ.
36ກີເດໂອນໄດ້ທູນພຣະເຈົ້າວ່າ, "ຖ້າພຣະອົງຊົງກ່າວວ່າ ພຣະອົງໃຊ້ຂ້ານ້ອຍຊ່ວຍຊີວິດຄົນອິສະຣາເອນ, ດັ່ງທີ່ພຣະອົງໄດ້ສັ່ງແລ້ວ-37ເບິ່ງແມ,
ຂ້ານ້ອຍຈະເອົາຂົນແກະວາງໄວ້ເທິງລານຟາດເຂົ້າ. ຖ້າວ່າມີນ້ຳຫມອກຕົກຖືກແຕ່ຂົນແກະເທົ່ານັ້ນ, ແລະພື້ນດິນ ກໍຍັງແຫ້ງຢູ່ຄືເກົ່າ, ແລ້ວຂ້າ-
ນ້ອຍຈຶ່ງຈະຮູ້ວ່າ ພຣະອົງຊົງໃຊ້ຂ້ານ້ອຍຊ່ວຍຊີວິດອິສະຣາເອນ, ຕາມທີ່ພຣະອົງໄດສັ່ງແທ້."
38ເຫດການດັ່ງກ່າວເກີດຂຶ້ນ-ກີເດໂອນໄດ້ລຸກມາແຕ່ເດິກ ໃນເຊົ້າມື້ໃຫມ່, ລາວກໍເອົາຂົນແກະນັ້ນມາ, ແລະປັ້ນນ້ຳຫມອກອອກຈາກຂົນແກະນັ້ນ,
ມີນ້ຳໄດ້ໄຫລອອກຫລາຍມາຈົນເຕັມຊາມ.
39ຫລັງຈາກນັ້ນ ກີເດໂອນຈຶ່ງທູນພຣະເຈົ້າວ່າ, "ຂໍຢ່າຊົງພຣະພິໂລດຂ້ານ້ອຍ, ຂໍໂຜດໃຫ້ຂ້ານ້ອຍໄດ້ເວົ້າຕື່ມອີກຄັ້ງ. ຂໍຊົງໂຜດໃຫ້ຂ້ານ້ອຍທົດ-
ລອງເບິ່ງຂົນແກະອີກເທື່ອຫນຶ່ງ. ໃນຄັ້ງນີ້ຂໍໃຫ້ຂົນແກະແຫ້ງ, ແລະ ໃຫ້ນ້ຳຫມອກຕົກລົງພື້ນດິນຮອບໆ."40ພຣະເຈົ້າໄດ້ຊົງເຮັດການ
ສິ່ງນັ້ນຕາມທີ່ລາວໄດ້ຮ້ອງຂໍ ໃນຄືນນັ້ນ. ຊົງໃຫ້ຂົນແກະແຫ້ງ, ແລະໃຫ້ມີນ້ຳຫມອກຕົກລົງພື້ນດິນຮອບໆ.

 generated on Tue Jun 17 19:01:42 2025

7 [1]ຫລັງຈາກເຢຣຸບບາອານ (ນັ້ນຄື, ກິເດໂອນ) ພ້ອມດ້ວຍປະຊາຊົນທັງຫມົດທີ່ຢູ່ກັບລາວໄດ້ລຸກແຕ່ເຊົ້າ, ແລະພວກເຂົາໄປຕັ້ງ-
ຄ້າຍພັກຢູ່ທາງບໍ່ນ້ຳພຸຮາໂຣດ. ສ່ວນຄ້າຍພັກຂອງຄົນມີດີອານ ແມ່ນຢູ່ທາງທິດເຫນືອຂອງພວກເຂົາຮ່ອມພູໃກ້ໆ ພູເຂົາໂມເຣ.

[2]ພຣະຢາເວຊົງກ່າວຕໍ່ກິເດໂອນວ່າ, "ມີທະຫານຫລາຍເກີນໄປສຳລັບເຮົາ ຈະໃຫ້ເຈົ້າມີໄຊຊະນະເຫນືອຄົນມີດີອານ, ເພື່ອທີ່ອິສະຣາເອນ
ຈະບໍ່ອວດອ້າງເຮົາໄດ້ ໂດຍກ່າວ່າ 'ກຳລັງຂອງພວກເຮົາເອງ ໄດ້ຊ່ວຍພວກເຮົາໄວ້'.[3]ເພາະສະນັ້ນ, ຈົ່ງປະກາດໃຫ້ປະຊາຊົນໄດ້ຍິນດຽວນີ້
ແລະກ່າວວ່າ,' ຖ້າຜູ້ໃດທີ່ຢ້ານກົວ, ຜູ້ໃດທີ່ສັ່ນສະເທືອນ, ຂໍໃຫ້ລາວກັບຄືນຈາກພູກິເລອາດນັ້ນເສຍ'." ດັ່ງນັ້ນຈຶ່ງມີຄົນຊາວສອງພັນ
ຄົນໄດ້ອອກໄປ, ແລະຍັງເຫລືອພຽງແຕ່ຫມື່ນຄົນເທົ່ານັ້ນ.
[4]ພຣະຢາເວຊົງກ່າວຕໍ່ກິເດໂອນວ່າ, "ປະຊາຊົນຍັງມີຫລາຍຢູ່. ຈົ່ງພາພວກເຂົາລົງໄປແຄມນ້ຳ, ແລ້ວເຮົາຈະເຮັດໃຫ້ຈຳນວນຂອງພວກ-
ເຂົານ້ອຍລົງສຳລັບເຈົ້າຢູ່ທີ່ນັ້ນ. ຖ້າເຮົາບອກເຈົ້າວ່າ, 'ຄົນນີ້ຈະໄປກັບເຈົ້າ', ລາວຈະໄປທັນທີ; ແຕ່ຖ້າວ່າເຮົາບອກ, 'ຄົນນີ້ບໍ່ໄປກັບເຈົ້າ', ລາວກໍ
ຈະບໍ່ໄປເດັດຂາດ."
[5]ດັ່ງນັ້ນ ກິເດໂອນຈຶ່ງນຳພາປະຊາຊົນລົງໄປແຄມນ້ຳ, ແລ້ວພຣະຢາເວຊົງບອກລາວວ່າ, "ຈົ່ງແຍກທຸກຄົນທີ່ດື່ມນ້ຳດ້ວຍລີ້ນ, ຄືກັນກັບຫມາ,
ອອກຈາກທຸກຄົນທີ່ຄຸເຂົ່າລົງດື່ມນ້ຳ."[6]ດັ່ງນັ້ນ ມີຈຳນວນສາມຮ້ອຍຄົນທີ່ເລຍກິນນ້ຳມືຢູ່. ສ່ວນຄົນທີ່ເຫລືອນັ້ນ ໄດ້ຄຸເຂົ່າລົງດື່ມນ້ຳ.
[7]ພຣະເຈົ້າຢາເວຈຶ່ງຊົງກ່າວຕໍ່ກິເດໂອນວ່າ, "ເຮົາຈະຊ່ວຍເຈົ້າໄວ້ ແລະໃຫ້ເຈົ້າຊະນະເຫນືອຄົນມີດີອານ ດ້ວຍຄົນຈຳນວນສາມຮ້ອຍຄົນທີ່ເລຍ
ກິນນ້ຳນັ້ນ. ແລ້ວໃຫ້ຄົນອື່ນທຸກໆຄົນກັບຄືນໄປບ່ອນຂອງຕົນເອງ."[8]ດັ່ງນັ້ນ ຄົນທີ່ຖືກເລືອກໄດ້ເອົາສະບຽງ ແລະແກ ຂອງພວກເຂົາ. ກິເດໂອນກໍ
ສັ່ງຄົນອິສະຣາເອນກັບຄືນເມືອຫມົດ, ທຸກຄົນກໍໄດ້ໄປທີ່ເຕັນຂອງເຂົາ, ເວັ້ນໄວ້ແຕ່ສາມຮ້ອຍຄົນເທົ່ານັ້ນທີ່ຍັງເຫລືອຢູ່. ໃນຂະນະນັ້ນ
ຄ້າຍຂອງຄົນມີດີອານ ໄດ້ລົງມາຢູ່ຮ່ອມພູທາງເບື້ອງລຸ່ມ.
[9]ໃນຄືນດຽວກັນນັ້ນ ພຣະຢາເວຊົງກ່າວຕໍ່ກິເດໂອນວ່າ, "ຈົ່ງລຸກຂຶ້ນ, ບຸກໂຈມຕີຄ້າຍ, ເຮົາຈະໃຫ້ເຈົ້າຊະນະເຫນືອຄ້າຍນັ້ນ.[10]ແຕ່ຖ້າເຈົ້າ
ຢ້ານກົວທີ່ຈະລົງໄປ, ລົງໄປທີ່ຄ້າຍກັບປູຣາຄົນໃຊ້ຂອງເຈົ້າ, [11]ແລະຟັງວ່າພວກເຂົາໄດ້ເວົ້າຫຍັງກັນແດ່, ແລະຄວາມກ້າຫານຂອງເຈົ້າ
ຈະໄດ້ເສີມກຳລັງ ເພື່ອບຸກໂຈມຕີຄ້າຍນັ້ນ". ດັ່ງນັ້ນ ກິເດໂອນ ຈຶ່ງໄປກັບກັບປູຣາຄົນໃຊ້ຂອງເຂົາ, ລົງໄປກອງກຳລັງຮັກສາເຂດແດນຄ້າຍນັ້ນ.
[12]ຝ່າຍຄົນມີດີອານ, ຄົນອາມາເຫລັກ, ແລະປະຊາຊົນໃນພາກຕາເວັນອອກທັງຫມົດທີ່ຢູ່ຕາມຮ່ອມພູຫນາແຫນ້ນ. ເຫມືອນດັ່ງຝູງຕັກແຕນ.ມີ
ຝູງອູດຂອງພວກເຂົາຫລາຍເກີນກວ່າທີ່ຈະນັບໄດ້; ພວກເຂົາມີຈຳນວນຫລາຍກວ່າເມັດດິນຊາຍເທິງແຄມທະເລ.
[13]ເມື່ອກິເດໂອນມາຮອດບ່ອນນັ້ນ, ມີຊາຍຜູ້ຫນຶ່ງພວມເລົ່າຄວາມຝັນຂອງຕົນສູ່ຫມູ່ຂອງລາວຟັງວ່າ. ຊາຍຄົນນັ້ນກ່າວວ່າ, ເບິ່ງແມ! "ຂ້ອຍໄດ້
ຝັນວ່າ, ແລະຂ້ອຍໄດ້ເຫັນເຂົ້າກ້ອນຫນຶ່ງທີ່ເຮັດດ້ວຍເຂົ້າບາເລ ກິ້ງເຂົ້າມາໃນຄ້າຍຄົນມີດີອານ. ເຂົ້າຈີ່ກ້ອນນີ້ກິ້ງເຂົ້າເຕັນນັ້ນ, ແລະ
ຕຳຜ້າເຕັນຢ່າງແຮງຈົນມັນຂວ້ຳລົງ, ແລະ ຫັນຫນ້າຂຶ້ນລົງ, ແລ້ວເຕັນກໍເພພັງລົງ."[14]ຊາຍຄົນອື່ນໄດ້ເວົ້າວ່າ, "ອັນນີ້ຕ້ອງຫມາຍເຖິງດາບຂອງກິ-
ເດໂອນ (ຊຶ່ງເປັນລູກຊາຍຂອງໂຢອາດ), ຄົນອິສະຣາເອນ. ພຣະເຈົ້າໄດ້ຊົງໂຜດໃຫ້ລາວຊະນະເຫນືອຄົນມີດີເອນ ແລະ ກອງທັບທັງຫມົດ
ຂອງພວກເຂົາແລ້ວ."
[15]ເມື່ອກິເດໂອນໄດ້ຍິນເລື່ອງຄວາມຝັນ ແລະ ການຕີຄວາມຫມາຍຂອງຄວາມຝັນນັ້ນ, ລາວກົ້ມຂາບໄຫວ້ນະມັດສະການ.
ລາວໄດ້ກັບໄປທີ່ຄ້າຍຂອງຄົນອິສະຣາເອນ ແລະກ່າວວ່າ, "ຈົ່ງລຸກຂຶ້ນ! ພຣະຢາເວຊົງມອບໄຊຊະນະເຫນືອກອງທັບມີດີອານ
ໃຫ້ແກ່ພວກເຈົ້າແລ້ວ".[16]ພຣະເຈົ້າຈຶ່ງໄດ້ແບ່ງຄົນສາມຮ້ອຍຄົນນັ້ນອອກເປັນສາມກຸ່ມ, ແລະພຣະອົງໄດ້ໃຫ້ແກທັງຫມົດ ແລະໄຫເປົ່າ,
ທີ່ມີໂຄມໄຟໃນຜູ້ລະຫນ່ວຍໃຫ້ແກ່ພວກເຂົາ.
[17]ລາວໄດ້ບອກພວກເຂົາວ່າ, "ຈົ່ງເບິ່ງເຮົາ ແລະເຮັດຕາມທີ່ເຮົາເຮັດ. ຈົ່ງຄອຍເຝົ້າເບິ່ງ! ເມື່ອເຮົາໄປຮອດຄ້າຍແລ້ວ,
ພວກທ່ານຈົ່ງເຮັດຢ່າງທີ່ເຮົາເຮັດ.[18]ເມື່ອເຮົາເປົ່າແກ, ເຮົາ ແລະທຸກຄົນທີ່ຢູ່ກັບເຮົາ, ແລ້ວກໍພາກັນເປົ່າແກຂອງພວກທ່ານເຊັ່ນດຽວກັນ
ຈາກທຸກໆດ້ານຂອງຄ້າຍທັງຫມົດ, ແລະຮ້ອງຕະໂກນຂຶ້ນ " ເພື່ອພຣະຢາເວ ແລະກິເດໂອນ!"
[19]ດັ່ງນັ້ນ ກິເດໂອນ ແລະຄົນຫນຶ່ງຮ້ອຍຄົນທີ່ຢູ່ກັບລາວ ກໍຮອດແຄມຄ້າຍພັກ, ໃນເວລາກ່ອນທ່ຽງຄືນ, ຂະນະທີ່ຄົນມີດີອານ ກຳລັງຈະປ່ຽນຄົນ
ຍາມໃຫມ່, ພວກເຂົາເປົ່າແກຂຶ້ນ ແລະທັບໄຫທີ່ພວກເຂົາຖືໄປນັ້ນໃຫ້ແຕກ.
[20]ທັງສາມກຸ່ມ ກໍເປົ່າແກຂຶ້ນ ແລະທັບໄຫເຫລົ່ານັ້ນໃຫ້ແຕກ. ພວກເຂົາຖືໂຄມໄຟ ໃນມືຊ້າຍຂອງພວກເຂົາ ແລະມືຂວາຖືແກເພື່ອເປົ່າແກ.
ພວກເຂົາຮ້ອງຕະໂກນວ່າ, "ດາບ! ເພື່ອພຣະຢາເວ ແລະກິເດໂອນ."[21]ທຸກໆ ຄົນຍືນຢູ່ບ່ອນອ້ອມຮອບຄ້າຍພັກນັ້ນ ແລະກອງທັບຄົນມີດີອານທັງ
ຫມົດ ໄດ້ແລ່ນໄປ. ພວກເຂົາໄດ້ຮ້ອງຕະໂກນ ແລະ ແລ່ນຫນີອອກໄປ.
[22]ເມື່ອພວກເຂົາເປົ່າແກສາມຮ້ອຍອັນ, ພຣະຢາເວ ຊົງບັນດານໃຫ້ຄົນມີດີອານທຸກຄົນຈັບດາບຕໍ່ສູ້ກັບເພື່ອນຂອງເຂົາ
ແລະຕໍ່ສູ້ກັບກອງທັບທັງຫມົດຂອງພວກເຂົາ. ກອງທັບນັ້ນ ກໍໄດ້ຫນີໄປໄກຈົນເຖິງເມືອງເບັດຊິດຕາ ໄປຍັງເມືອງເຊເຣທານ, ໄກ
ໄປຈົນເຖິງເຂດແດນເມືອງອາເບັນເມໂຮລາ, ໃກ້ບ້ານຕັບບັດ.[23]ພວກອິສະຣາເອນທີ່ມາຈາກເຜົ່າເນັບທາລີ, ເຜົ່າອາເຊ, ແລະເຜົ່າມານາເຊ ແລະ
ເຜົ່າທຸກໆຄົນ ກໍຖືກໄລ່ອອກ, ແລະ ພວກເຂົາ ກໍໄດ້ໄລ່ຄົນມີດີອານໄປ.
[24]ກິເດໂອນໄດ້ສົ່ງຄົນນຳຂ່າວໄປບອກທົ່ວທັງເຂດພູເຂົາເອຟຣາອິມ ໄດ້ກ່າວວ່າ, "ຈົ່ງລົງໄປຕໍ່ສູ້ກັບຄົນມີດີອານ ແລະຍຶດເອົາແມ່ນ້ຳຈໍແດນໄວ້,
ໄກໄປຈົນເຖິງເບັດບາຣາ, ເພື່ອສະກັດພວກເຂົາໄວ້." ດັ່ງນັ້ນຄົນເອຟຣາອິມທັງຫມົດກໍມາເຕົ້າໂຮມກັນ ແລະຍຶດບັນດາສາຍນ້ຳນັ້ນໄວ້, ໄປໄກຈົນ
ຮອດເຂດເບັດບາຣາ ແລະແມ່ນ້ຳຈໍແດນ.[25]ພວກເຂົາໄດ້ຈັບເຈົ້ານາຍສອງຄົນຂອງມີດີອານ, ຄື ໂອເຣັບ ແລະເຊເອັບ. ພວກເຂົາໄດ້ຂ້າໂອເຣັບຢູ່
ເທິງຫີນດານໂອເຣັບ ແລະພວກເຂົາໄດ້ຂ້າ ເຊເອບທີ່ບໍ່ເຫລົ້າອາງຸ່ນເຊເອັບ. ພວກເຂົາກໍຂັບໄລ່ກວາດລ້າງຄົນມີດີອານໄປ, ແລະພວກເຂົາໄດ້ນຳ-
ເອົາຫົວຂອງໂອເຣັບກັບເຊເອັບໄປທີ່ກິເດໂອນ, ຊຶ່ງຢູ່ຟາກຫນຶ່ງຂອງແມ່ນ້ຳຈໍແດນ.


generated on Tue Jun 17 19:01:42 2025

8 [1]ຄົນເອຟຣາອິມໄດ້ເວົ້າຕໍ່ກິເດໂອນວ່າ, “ທ່ານໄດ້ເຮັດຫຍັງກັບພວກເຮົາ? ທ່ານບໍ່ໄດ້ເອີ້ນພວກເຮົາ ເມື່ອທ່ານໄດ້ສູ້ຮົບກັບຄົນມີດີອານ".
ຫລັງຈາກນັ້ນ ພວກເຂົາ ກໍໂຕ້ຖຽງກັນຢ່າງຮຸນແຮງກັບລາວ.

[2]ແລ້ວພວກເຂົາກໍຄຽດໃຫ້ກິເດໂອນ ແລະບອກວ່າ, “ບັດນີ້ຂ້ານ້ອຍໄດ້ເຮັດຫຍັງທີ່ຈະປຽບທຽບກັບສິ່ງທີ່ພວກເຈົ້າເຮັດໄດ້?. ຜົນອະງຸ່ນທີ່ຊາວ
ເອຟຣາອິມ ເກັບຕົກກໍຍັງດີກວ່າຜົນອະງຸ່ນທີ່ອາບີເອຊາເກັບກ່ຽວ ທັງຫມົດ?.
[3]ພຣະເຈົ້າຊົງມອບໄຊຊະນະແກ່ພວກທ່ານ ເຫນືອບັນດາເຈົ້ານາຍຂອງ
ຄົນມີດີອານ ຄື ໂອເຣັບ ແລະເຊເອັບ! ຂ້ານ້ອຍມີຄວາມສາມາດອັນໃດທີ່ຈະປຽບທຽບກັບສິ່ງທີ່ພວກທ່ານໄດ້”. ເມື່ອກິເດໂອນໄດ້ເວົ້າດັ່ງນັ້ນແລ້ວ
ພວກເຂົາກໍເຊົາຄຽດ.
[4]ກິເດໂອນກັບສາມຮ້ອຍຄົນຮອດແມ່ນ້ຳຈໍແດນ ແລະໄດ້ຂ້ວາມແມ່ນ້ຳນັ້ນໄປ. ພວກເຂົາອິດເມື່ອຍຫມົດແຮງ, ແຕ່ກໍຍັງຄົງໄລ່ຕາມໄປ.
[5]ກິເດໂອນ
ໄດ້ເວົ້າຕໍ່ຊາວເມືອງສຸໂຄດວ່າ, “ຂໍໂຜດໃຫ້ເຂົ້າຈີ່ແກ່ຄົນທີ່ຕິດຕາມຂ້ອຍແດ່ເຖີ້ນ, ເພາະພວກເຂົາອິດເມື່ອຍຫລາຍ, ແລະຂ້ອຍກໍາລັງໄລ່ຕາມເຊ-
ບາກັບຊັນມູນນາ ເຈົ້າຊີວິດຂອງພວກມີດີອານຢູ່.”
[6]ແຕ່ພວກຜູ້ນໍາຂອງເມືອງສຸໂຄດເວົ້າວ່າ, “ເຫດໃດພວກຂ້ອຍຈຶ່ງຈະຕ້ອງເອົາອາຫານໃຫ້ທະຫານຂອງເຈົ້າກິນ ໃນເມື່ອເຈົ້າຍັງບໍ່ທັນຈັບເຊບາ
ແລະຊັນມູນນາໄດ້ເທື່ອ.”
[7]ດັ່ງນັ້ນ ກິເດໂອນຈຶ່ງເວົ້າວ່າ, “ດີແລ້ວ ເມື່ອໃດພຣະຜູ້ເປັນເຈົ້າຊົງມອບເຊບາ ແລະຊັນມູນນາ ໄວ້ໃນກໍາມືຂອງຂ້ອຍ
ຂ້ອຍຈະເອົາຫວາຍທີ່ຍັງມີຫນາມ ແລະໄມ້ຫນາມມາຂ້ຽນພວກເຈົ້າ.”
[8]ຈາກນັ້ນ ກິເດໂອນກໍໄປຍັງເມືອງເປນູເອນ,ແລະໄດ້ເວົ້າຕໍ່ຊາວເມືອງນັ້ນຢ່າງດຽວກັນ, ແຕ່ຊາວເມືອງເປນູເອນກໍຕອບຢ່າງດຽວກັນເຫມືອນກັບ
ຊາວເມືອງສຸໂຄດ.
[9]ເຂົາຈຶ່ງເວົ້າກັບຄົນຊຸກໂກດ ແລະກ່າວວ່າ “ເມື່ອຂ້ອຍກັບຄືນມາອີກຄັ້ງໂດຍຄວາມສະຫງົບສຸກ, ຂ້ອຍຈະທໍາລາຍຫໍຄອຍນີ້
ລົງ.”
[10]ຕອນນີ້ ເຊບາ ແລະຊັນມູນນາ ໄດ້ຢູ່ທີ່ກາໂກເຣ ກັບກອງທັບຂອງພວກເຂົາ, ທີ່ມີປະມານສິບຫ້າພັນຄົນ,
ຄົນທັງຫມົດກໍຍັງເຫລືອຢູ່ຈາກກອງທັບທັງຫມົດຂອງຊາວຕາເວັນອອກ, ເພາະມີທະຫານທີ່ໄດ້ການຝຶກການສູ້ຮົບດ້ວຍດາບ
ໄດ້ລົ້ມຕາຍໄປຫນຶ່ງແສນຊາວພັນຄົນ.
[11]ກິເດໂອນໄດ້ໄປຕາມເສັ້ນທາງທີ່ພວກເຂົາອາໄສຢູ່ໃນແດນຍຶດຄອງໄດ້, ຜ່ານເມືອງໂນບາແລະໂຢກເບຮາ. ເຂົາໄດ້ເອົາຊະນະກອງທັບສັດຕຣູ,
ເພາະພວກເຂົາຄິດວ່າຈະບໍ່ໄດ້ຖືກໂຈມຕີ.
[12]ເຊບາແລະຊັນມູນນາກໍແລ່ນປົບຫນີໄປ, ແລະຂະນະທີ່ກິເດໂອນໄລ່ຕາມພວກເຂົາໄປ, ເຂົາໄດ້
ຈັບເຈົ້າຊີວິດມີດີອານທັງສອງຄົນ -ຄືເຊບາ ແລະຊັນມູນນາ-ແລະໄດ້ເຮັດໃຫ້ກອງທັບຂອງພວກເຂົາທັງຫມົດແຕກຕື່ນ.
[13]ກິເດໂອນ, ລູກຊາຍຂອງໂຢອາດກໍກັບມາຈາກສູ້ຮົບໂດຍຜ່ານມາທາງເຮເຣັດ.
[14]ລາວໄດ້ແລ່ນໄປຫາຊາຍຫນຸ່ມຜູ້ຫນຶ່ງທີ່ເປັນຄົນສຸໂຄດ ແລະ
ຂໍຄໍາແນະນໍາຈາກເຂົາ. ຊາຍຫນຸ່ມຜູ້ນັ້ນໄດ້ອະທິບາຍໃຫ້ລາວຟັງກ່ຽວກັບຜູ້ນໍາຂອງເມືອງສຸໂຄດ ແລະພວກເຖົ້າແກ່, ເຈັດສິບເຈັດຄົນຂອງ
ເມືອງນັ້ນ.
[15]ກິເດໂອນໄປຫາຊາວເມືອງສຸໂຄດ ແລະໄດ້ເວົ້າວ່າ, “ຈົ່ງເບິ່ງເຊບາ ແລະ ຊັນມູນນາ ຜູ້ທີ່ພວກເຈົ້າໄດ້ດູຫມິ່ນປະຫມາດຂ້ອຍ ແລະເວົ້າ, 'ພວກ
ເຈົ້າໄດ້ໄຊະນະເຊບາກັບຊັນມູນນາແລ້ວຫລື ບໍ່? ພວກເຮົາບໍ່ຮູ້ວ່າຄວນຈະເອົາເຂົ້າຈີ່ໃຫ້ກອງທັບຂອງພວກເຈົ້າ'."
[16]ກິເດໂອນ
ຈຶ່ງນໍາພວກຜູ້ເຖົ້າແກ່ໃນເມືອງນັ້ນໄປ, ແລະລາວໄດ້ລົງໂທດຄົນສຸໂຄດເຫລົ່ານັ້ນດ້ວຍຫນາມໃນທະເລຊາຍ ແລະ ພຸ່ມຫນາມ.
[17]ຫລັງຈາກນັ້ນ,
ລາວໄດ້ທໍາລາຍຫໍຄອຍຂອງເມືອງເປນູເອນ ແລະ ຂ້າຊາວເມືອງນັ້ນ.
[18]ຫລັງຈາກນັ້ນ ກິເດໂອນໄດ້ເວົ້າກັບຖາມເຊບາ ແລະຊັນມູນນາວ່າ, “ຄົນເຫລົ່ານັ້ນທີ່ພວກເຈົ້າຂ້າທີ່ພູເຂົາຕາໂບນັ້ນ ເປັນຄົນປະເພດໃດ?”.
ພວກເຂົາໄດ້ຕອບວ່າ, “ພວກເຈົ້າເປັນແນວໃດ, ພວກເຂົາກໍເປັນຢ່າງນັ້ນ. ພວກເຂົາທຸກໆຄົນຄືກັນກັບລູກຊາຍຂອງກະສັດ.”
[19]ກິເດໂອນຈຶ່ງເວົ້າ
ວ່າ, “ພວກເຂົາເປັນອ້າຍນ້ອງຂອງຂ້ອຍ, ເປັນລູກຊາຍຂອງແມ່ຂ້ອຍ. ພຣະຢາເວຊົງມີຊີວິດຢູ່ສັນໃດ,
ຖ້າພວກເຈົ້າໄດ້ຊ່ວຍພວກເຂົາໃຫ້ມີຊີຊິດຢູ່, ຂ້ອຍຈະບໍ່ຂ້າພວກເຈົ້າ.”
[20]ລາວໄດ້ເວົ້າກັບເຢເທ (ລູກຊາຍກົກຂອງລາວ) ວ່າ, “ຈົ່ງລຸກຂຶ້ນ ແລະໄປຂ້າພວກເຂົາເສຍ!” ແຕ່ຊາຍຫນຸ່ມນັ້ນບໍ່ກ້າຖອດດາບອອກ ເພາະລາວ
ຢ້ານ ເພາະວ່າລາວຍັງເປັນເດັກນ້ອຍຢູ່.
[21]ແລ້ວເຊບາ ແລະຊັນມູນນາເວົ້າວ່າ, “ທ່ານຈົ່ງລຸກຂຶ້ນ ແລະຂ້າພວກເຮົາດ້ວຍຕົນເອງເຖີ້ນ! ເພາະຍິງຜູ້-
ຊາຍເຕັມຕົວເທົ່າໃດ, ກໍາລັງຂອງເຂົາກໍຫລາຍເທົ່ານັ້ນ”. ກິເດໂອນຈຶ່ງຂ້າເຊບາກັບຊັນມູນນາ. ເຂົາຍັງເອົາເຄື່ອງປະດັບທີ່ມີຮູບພະຈັນທີ່ເອ້ຄໍ
ອູດຂອງພວກເຂົາໄປພ້ອມ.
[22]ຫລັງຈາກນັ້ນ ຄົນອິສະຣາເອນໄດ້ເວົ້າຕໍ່ກິເດໂອນວ່າ, “ຂໍຈົ່ງເປັນຜູ້ຄຸ້ມຄອງພວກຂ້ານ້ອຍເຖີ້ນ, ທັງທ່ານ ແລະລູກຂອງທ່ານ,
ແລະຫລານຂອງທ່ານ- ເພາະວ່າ ທ່ານໄດ້ຊ່ອຍພວກເຮົາໃຫ້ພົ້ນຈາກເງື້ອມມືຂອງຄົນມີດີອານ.”
[23]ກິເດໂອນໄດ້ຕອບພວກເຂົາວ່າ, “ຂ້ອຍ ແລະ
ລູກຊາຍຂອງຂ້ອຍຈະບໍ່ເປັນຜູ້ຄຸ້ມຄອງຂອງພວກເຈົ້າເຊັ່ນກັນ. ພຣະຢາເວເປັນຜູ້ຄຸ້ມຄອງພວກເຈົ້າ.”
[24]ກິເດໂອນເວົ້າຕໍ່ໄປອີກວ່າ, “ໃຫ້ຂ້ອຍຂໍສິ່ງຫນຶ່ງຈາກພວກເຈົ້າ ຄືຂໍໃຫ້ແຕ່ລະຄົນໃນພວກເຈົ້າໃຫ້ຕຸ້ມຫູເຫລົ່ານັ້ນຈາກຂອງທີ່ພວກເຈົ້າຍຶດ
ມາຂອງເຂົາໄດ້ນັ້ນໃຫ້ແກ່ຂ້ອຍ” (ຄົນມີດີອານຖືຕຸ້ມຫູຄໍາ ເພາະວ່າພວກເຂົາເປັນຄົນອິດຊາມາເອນ).
[25]ພວກເຂົາຕອບວ່າ, “ພວກເຮົາຍິນດີທີ່ຈະ
ເອົາສິ່ງເຫລົ່ານີ້ໃຫ້ທ່ານ”. ພວກເຂົາຈຶ່ງປູເສື່ອຄຸມ ແລະທຸກຄົນ ກໍໂຍນຕູ້ມຫູຈາກຂອງທີ່ຍຶດມາຂອງເຂົາ ລົງໄປໃນເສື່ອຄຸມນັ້ນ.
[26]ນ້ຳຫນັກຂອງຕຸ້ມຫູຄໍາທີ່ລາວຂໍມານັ້ນໄດ້ພັນເຈັດຮ້ອຍບາດ.ນອກຈາກນີ້ຂອງທີ່ປຸ້ນມາໄດ້ຍັງມີເຄື່ອງປະດັບ, ເຄື່ອງເອ້ ສ້ອຍຄໍ, ເຄື່ອງນຸ່ງສີມ່ວງ
ທີ່ເຈົ້າ ຊີວິດມີດີອານນຸ່ງຖື, ແລະອີກທັງເຄື່ອງເອ້ສ້ອຍທີ່ຜູກຄໍພວກອູດຂອງພວກເຂົາດ້ວຍ.
[27]ກິເດໂອນໄດ້ເຮັດ ໂອຟຣາອັນຫນຶ່ງຈາກຕຸ້ມຫູເຫລົ່ານັ້ນ ແລະເກັບໄວ້ໃນເມືອງຂອງເຂົາໃນເມືອງໂອຟະຣາ ແລະຄົນອິສະຣາເອນທັງຫມົດ
ກໍຫລິ້ນຊູກັນ ໂດຍພາກັນນະມັດສະການຮູບພຣະນັ້ນ. ຊຶ່ງໄດ້ເປັນບ້ວງແຮ້ວແກ່ກິເດໂອນ ແລະຄົນທີ່ຢູ່ໃນຄອບຄົວຂອງເຂົາ.
[28]ດັ່ງນັ້ນ ຄົນມີດີອານ
ໄດ້ພ່າຍແພ້ຕໍ່ຫນ້າຄົນອິສະຣາເອນ ແລະພວກເຂົາບໍ່ໄດ້ຍົກຫົວຂຶ້ນອີກ. ດັ່ງນັ້ນ ພື້ນແຜ່ນດິນກໍໄດ້ຮັບຄວາມສະຫງົບສຸກຕະຫລອດ
ສີ່ສິບປີໃນສະໄຫມຂອງກິເດໂອນ.
[29]ເຢຣຸບບາອານ, ລູກຊາຍຂອງໂຢອາດ ໄດ້ໄປ ແລະ ອາໄສຢູ່ໃນບ້ານຂອງຕົນ.
[30]ກິເດໂອນມີລູກຊາຍເຈັດສິບຄົນທີ່ເປັນເຊື້ອສາຍຂອງເຂົາ,
ເພາະລາວມີເມຍຫລາຍຄົນ.
[31]ເມຍນ້ອຍຂອງລາວທີ່ຢູ່ເມືອງເຊເຄມ, ກໍໄດ້ເກີດລູກຊາຍໃຫ້ແກ່ລາວ, ແລະກິເດໂອນຕັ້ງຊື່ລູກຊາຍຜູ້ຫນຶ່ງວ່າ
ອາບີເມເຫລັກ.

 generated on Tue Jun 17 19:01:42 2025

[32]ກີເດໂອນ, ລູກຊາຍຂອງໂຢອາດ, ໄດ້ເສຍຊີວິດໃນວັຍເຖົ້າແກ່ຫລາຍແລ້ວ ແລະສົບຂອງລາວໄດ້ຝັງໄວ້ໃນເມືອງໂອຟະຣາໃນອຸບມຸງຝັງສົບຂອງ
ໂຢອາດພໍ່ຂອງລາວ, ຊຶ່ງເປັນເມືອງຂອງຕະກູນອາບີເອເຊ.[33]ຕໍ່ມາ, ເມື່ອເຫດການກີເດໂອນໄດ້ເສຍຊີວິດແລ້ວ, ຄົນອິສະຣາເອນ
ກໍໄດ້ກັບຫັນຄືນໄປອີກ ແລະຫລິ້ນຊູກັນ ໂດຍພາກັນນະມັດສະການພຣະບາອານ. ພວກເຂົາໄດ້ເຮັດໃຫ້ພຣະບາອານເບຣິດເປັນພຣະຂອງ
ພວກເຂົາ.
[34]ຄົນອິສະຣາເອນຫລົງລືມການທີ່ຈະຖວາຍກຽດຕິຍົດພຣະຢາເວ, ພຣະເຈົ້າຂອງພວກເຂົາ, ຜູ້ຊຶ່ງຊ່ອຍຕົນໃຫ້ພົ້ນຈາກມືຂອງສັດ-
ຕຣູຂອງພວກເຂົາທີ່ຢູ່ອ້ອມຮອບທຸກໆດ້ານນັ້ນ.[35]ພວກເຂົາບໍ່ຮັກສາສັນຍາທີ່ມີຕໍ່ຄອບຄົວເຢຣຸບບາເອນ (ນັ້ນຄື ກີເດໂອນ),
ໃນການຕອບແທນສຳລັບທີ່ເຄີຍສ້າງຄຸນງາມຄວາມດີໄວ້ກັບຄົນອິສະຣາເອນ.

 generated on Tue Jun 17 19:01:42 2025

9 1ຢູ່ມາ ອາບີເມເຫລັກລູກຊາຍຂອງ ເຢຣຸບບາອານ ໄດ້ໄປຫາພວກຍາດພີ່ນ້ອງຂອງແມ່ທີ່ເມືອງຊີເຄມ ແລະ ລາວໄດ້ເວົ້າກັບພວກເຂົາ ແລະ
ກັບຕະກູນຂອງຄອບຄົວຂອງແມ່ລາວທັງຫມົດວ່າ, 2"ຂໍໂຜດເວົ້າແບບນີ້, 'ເພື່ອໃຫ້ຜູ້ນຳທັງຫມົດເມືອງຊີເຄມຈະໄດ້ຍິນວ່າ,
"ແນວໃດທີ່ດີກວ່າກັນສຳລັບພວກເຈົ້າ: ທີ່ຈະມີລູກຊາຍທັງເຈັດສິບຄົນຂອງເຢຣຸບບາອານ ເປັນຄົນປົກຄອງພວກເຈົ້າ ຫລືວ່າ ຄົນດຽວ
ເປັນຄົນປົກຄອງພວກເຈົ້າ? ຈົ່ງເຂົ້າໃຈວ່າ ຂ້ອຍກໍເປັນກະດູກ ແລະເປັນເນື້ອຫນັງຂອງພວກເຈົ້າ."

3ແລ້ວບັນດາພີ່ນ້ອງທາງແມ່ຂອງອາບີເມເຫລັກ ໄດ້ເວົ້າກັບພວກຜູ້ນຳເມືອງຊີເຄມ, ແລະພວກເຂົາເຫັນດີທີ່ຈະຕິດຕາມອາບີເມເຫລັກ,
ເພາະພວກເຂົາໄດ້ເວົ້າວ່າ, "ລາວເປັນພີ່ນ້ອງຂອງພວກເຮົາ". 4ພວກເຂົາໄດ້ເອົາເງິນເຈັດສິບຫລຽນຈາກວິຫານແຫ່ງບາອານເບຣິດໃຫ້ແກ່ລາວ,
ແລະອາບີເມເຫລັກກໍເອົາເງິນນັ້ນ ໄປຈ້າງພວກອັດຕະພານ, ຜູ້ທີ່ຕິດຕາມລາວໄປ.
5ອາບີເມເຫລັກໄດ້ໄປທີ່ບ້ານພໍ່ຂອງເຂົາທີ່ເມືອງໂອຟະຣາ, ແລະລາວໄດ້ຂ້າລູກຊາຍເຈັດສິບຄົນ, ລູກຊາຍຂອງເຢຣຸບບາອານຢູ່ເທິງຫີນແຜ່ນດຽວ
ກັນ. ເຫລືອພຽງແຕ່ ໂຢທາມ, ທີ່ເປັນລູກຊາຍຫລ້າ ຂອງ ເຢຣຸບບາອານ, ເພາະລາວໄດ້ໄປລີ້ຢູ່. 6ບັນດາຜູ້ນຳທັງຫມົດຂອງເມືອງຊາວຊີເຄມ
ພ້ອມທັງຊາວເບັດມິນໂລ ກໍໄດ້ມາເຕົ້າໂຮມກັນ ແລະພວກເຂົາໄປ ແລະແຕ່ງຕັ້ງອາບີເມເຫລັກເປັນເຈົ້າຊີວິດ, ຢູ່ຂ້າງຕົ້ນສົນໃກ້ກັບເສົານັ້ນ
ທີ່ຕັ້ງໃນເມືອງຊີເຄມ.
7ເມື່ອໂຢທາມໄດ້ຍິນເລື່ອງນີ້, ລາວກໍໄປຢືນຢູ່ເທິງຍອດພູເຂົາເກຣິຊິມ. ລາວໄດ້ຮ້ອງຕະໂກນ ແລະເວົ້າກັບພວກເຂົາວ່າ, "ພວກເຈົ້າ,
ພວກຜູ້ນຳທັງຫມົດຂອງຊາວຊີເຄມທັງຫລາຍ ຈົ່ງຟັງຂ້ອຍ ເພື່ອພຣະເຈົ້າອາດຈະຊົງຟັງພວກເຈົ້າ. 8ຄັ້ງຫນຶ່ງ, ຕົ້ນໄມ້ທັງຫມົດ
ອອກໄປເພື່ອແຕ່ງຕັ້ງເຈົ້າຊີວິດຄົນຫນຶ່ງໃຫ້ປົກຄອງພວກມັນ. ເພາະພວກມັນໄດ້ເວົ້າກັບຕົ້ນຫມາກກອກວ່າ,' ຂໍຈົ່ງປົກຄອງເຫນືອພວກເຮົາເຖີ້ນ'.
9ແຕ່ຕົ້ນຫມາກກອກໄດ້ຕອບພວກມັນວ່າ,' ຂ້ອຍຄວນຈະປະຖິ້ມຜະລິດນ້ຳມັນຂອງຂ້ອຍ, ທີ່ໃຊ້ຖວາຍກຽດແກ່ເທບພຣະເຈົ້າ ແລະ ມວນມະນຸດ,
ເພື່ອຂ້ອຍຈະກັບຄືນມາ, ເພື່ອໂຍກຕົ້ນໄມ້ອື່ນໆ?'. 10ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນຫມາກເດື່ອວ່າ, 'ຂໍຈົ່ງມາ ແລະປົກຄອງເຫນືອພວກເຮົາເຖີ້ນ'.
11ແຕ່ຕົ້ນຫມາກເດື່ອຕອບພວກມັນວ່າ, 'ຂ້ອຍຄວນຈະປະຖິ້ມຜົນຜະລິດທີ່ຫວານ ແລະ ຫມາກໄມ້ທີ່ດີຂອງຂ້ອຍ, ເພື່ອຂ້ອຍຈະກັບມາ
ແລະໂຍກຕົ້ນໄມ້ອື່ນໆບໍ?'.
12ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນອະງຸ່ນວ່າ, 'ຂໍຈົ່ງມາ ແລະປົກຄອງເຫນືອພວກເຮົາເຖີ້ນ'. 13ແຕ່ຕົ້ນອະງຸ່ນຕອບພວກມັນວ່າ,
'ຂ້ອຍຄວນຈະປະຖິ້ມຜົນຜະລິດອະງຸ່ນ, ທີ່ເຮັດໃຫ້ເທບພຣະເຈົ້າ ແລະມວນມະນຸດມີຄວາມສຸກ, ແລະກັບຄືນໄປ, ແລະໂຍກຕົ້ນໄມ້ອື່ນ?.' 14ແລ້ວ
ຕົ້ນໄມ້ທຸກຕົ້ນໄດ້ເວົ້າຕໍ່ຕົ້ນພຸ່ມຫນາມວ່າ, 'ຂໍຈົ່ງມາ ແລະປົກຄອງເຫນືອພວກເຮົາເຖີ້ນ'.
15ຕົ້ນພຸ່ມຫນາມໄດ້ຕອບກັບຕົ້ນໄມ້ເຫລົ່ານັ້ນວ່າ, 'ຖ້າພວກເຈົ້າຕ້ອງການແຕ່ງຕັ້ງໃຫ້ຂ້ອຍເປັນເຈົ້າຊີວິດເຫນືອພວກເຈົ້າແທ້, ເຊີນມາ
ແລະຫາທີ່ບ່ອນປອດໄພຊົ້ນຮົ່ມຂອງຂ້ອຍ. ຖ້າບໍ່ເປັນດັ່ງນັ້ນ, ຈົ່ງປ່ອຍໃຫ້ໄຟອອກມາຈາກຕົ້ນພຸ່ມຫນາມ ແລະ ໃຫ້ໄຟນັ້ນເຜົາໄຫມ້ຕົ້ນສົນທັງ-
ຫລາຍທີ່ຢູ່ເທິງພູເລບານອນນີ້.' 16ສະນັ້ນ, ບັດນີ້, ຖ້າພວກເຈົ້າປະຕິບັດດ້ວຍຄວາມຈິງໃຈ, ແລະ ຊື່ສັດ, ເມື່ອພວກເຈົ້າໄດ້ແຕ່ງຕັ້ງອາບີເມເຫລັກ
ເປັນເຈົ້າຊີວິດ, ແລະ ຖ້າພວກເຈົ້າເຮັດດີຕໍ່ເຢຣຸບບາອານ ແລະ ຄອບຄົວຂອງລາວແບບນີ້, ແລະ
ຖ້າພວກເຈົ້າໄດ້ລົງໂທດລາວຕາມສົມຄວນຈະໄດ້ຮັບ-.
17-ແລະຄິດວ່າພໍ່ຂອງຂ້ອຍໄດ້ຕໍ່ສູ້ເພື່ອພວກເຈົ້າ, ເພິ່ນໄດ້ສ່ຽງຊີວິດຂອງເພິ່ນ, ແລະເພື່ອຊ່ວຍພວກເຈົ້າໃຫ້ພົ້ນຈາກມືຂອງຄົນມີດີອານ- 18ແຕ່ມື້ນີ້
ພວກເຈົ້າໄດ້ລຸກຂຶ້ນມາຕໍ່ສູ້ຄອບຄົວພໍ່ຂອງຂ້ອຍ ແລະ ໄດ້ຂ້າລູກຊາຍເຈັດສິບຄົນຂອງເພິ່ນ, ຢູ່ເທິງຫີນແຜ່ນດຽວ ແລ້ວພວກເຈົ້າໄດ້ແຕ່ງຕັ້ງອາບີ-
ເມເຫລັກ, ລູກທີ່ເກີດຈາກຍິງຮັບໃຊ້ຂອງເພິ່ນ, ເປັນເຈົ້າຊີວິດເຫນືອຜູ້ນຳທັງຫມົດຂອງຊີເຄມ, ເພາະວ່າລາວເປັນເຊື້ອສາຍຂອງພວກເຈົ້າ.
19ຖ້າພວກເຈົ້າປະຕິບັດດ້ວຍຄວາມຊື່ສັດ ແລະ ຄວາມຈິງໃຈ ສັດຊື່ຕໍ່ ເຢຣຸບບາອານ ແລະຄອບຄົວຂອງເພິ່ນ, ແລ້ວພວກເຈົ້າຈະມີຄວາມປິຕິຍິນດີ
ກັບອາບີເມເຫລັກ, ແລະໃຫ້ລາວຈົ່ງມີຄວາມຍິນດີຢູ່ກັບພວກເຈົ້າເຖີ້ນ. 20ແຕ່ຖ້າບໍ່ເປັນດັ່ງນັ້ນ, ຈົ່ງປ່ອຍໃຫ້ໄຟ ອອກກມາຈາກອາບີເມເຫລັກ
ແລະເຜົາຜານຊາວຊີເຄມກັບຊາວເບັດມິນໂລ. ປ່ອຍໃຫ້ໄຟລຸກອອກມາຈາກຊີເຄມ ແລະເບັດມິນໂລ, ເຜົາຜານອາບີເມເຫລັກເຊັ່ນດຽວກັນເຖີ້ນ.
21ແລະ ລາວໄປຍັງເມືອງເບເອ. ລາວໄດ້ອາໄສຢູ່ທີ່ນັ້ນ ເພາະເມືອງນັ້ນໃກ້ກັບອາບີເມເຫລັກ, ອ້າຍຂອງລາວ.
22ອາບີເມເຫລັກໄດ້ປົກຄອງເຫນືອອິສະຣາເອນເປັນເວລາສາມປີ. 23ພຣະເຈົ້າຊົງໃຫ້ວິນຍານອັນຊົ່ວຮ້າຍເຂົ້າມາ ລະຫວ່າງອາບີເມເຫລັກ
ກັບພວກຜູ້ນຳເມືອງຊີເຄມ. ຜູ້ນຳຂອງຊີເຄມໄດ້ທໍລະຍົດຕໍ່ຄວາມໄວ້ວາງໃຈທີ່ພວກເຂົາມີ ກັບອາບີເມເຫລັກ. 24ພຣະເຈົ້າ ໄດ້ຊົງເຮັດສິ່ງນີ້
ເພື່ອທີ່ຈະແກ້ແຄ້ນການທາລຸນທີ່ພວກເຂົາໄດ້ເຮັດແກ່ລູກຊາຍເຈັດສິບຄົນຂອງເຢຣຸບບາອານ, ແລະອາບີເມເຫລັກ ຊຶ່ງເປັນພີ່ນ້ອງຂອງພວກເຂົາ
ກໍຈະຕ້ອງຮັບຜິດຊອບຕໍ່ການຂ້າພວກເຂົາ, ແລະຄົນຊີເຄມ ກໍຈະຕ້ອງຮັບຜິດຊອບ ເພາະເຂົາໄດ້ຊ່ວຍອາບີເມເຫລັກຂ້າພີ່ນ້ອງຂອງພວກເຂົາ.
25ດັ່ງນັ້ນ ພວກຜູ້ນຳຂອງເມືອງຊີເຄມ ຈຶ່ງໄດ້ແຕ່ງຜູ້ຊາຍເພື່ອຊຸ້ມຢູ່ລໍຄອຍຢູ່ເທິງຍອດພູເຂົາ ທີ່ພວກເຂົາສາມາດດັກຈັບອາບີເມເຫລັກ ແລະພວກ-
ເຂົາກໍປຸ້ນທຸກຄົນທີ່ຜ່ານໄປມາທາງນັ້ນ. ເລື່ອງນີ້ຖືກລາຍງານໃຫ້ອາບີເມເຫລັກໃຫ້ຮູ້.
26ຝ່າຍກາອານລູກຊາຍເອເບັດໄດ້ມາກັບຍາດພີ່ນ້ອງຂອງລາວ ແລະ ພວກເຂົາໄດ້ຂວ້າມໄປໃນເມືອງຊີເຄມ. ພວກຜູ້ນຳຂອງເມືອງຊີເຄມ
ກໍມີຄວາມຫມັ້ນໃຈກາອານ. 27ພວກເຂົາຈຶ່ງພາກັນອອກໄປໃນທົ່ງນາ ແລະເກັບຫມາກອະງຸ່ນຈາກສວນອະງຸ່ນ, ແລະພວກເຂົາໄດ້
ຢຽບຫມາກອະງຸ່ນ. ພວກເຂົາ ໄດ້ຈັດງານລ້ຽງໃນວິຫານຂອງພຣະຂອງພວກເຂົາ, ບ່ອນທີ່ພວກເຂົາໄດ້ກິນ ແລະດື່ມ, ແລະໄດ້ດ່າສາບແຊ່ງອາ-
ບີເມເຫລັກດ້ວຍ.
28ກາອານລູກຊາຍຂອງເອເບັດຈຶ່ງກ່າວວ່າ, "ອາບີເມເຫລັກຄືໃຜ, ແລະເຮົາຊາວຊີເຄມເປັນໃຜ, ທີ່ພວກເຮົາຄວນຮັບໃຊ້ລາວ?
ລາວບໍ່ແມ່ນລູກຊາຍຂອງເຢຣຸບບາອານ? ເຊບູນບໍ່ແມ່ນເປັນເຈົ້າຫນ້າທີ່ບໍ? ຈົ່ງຮັບໃຊ້ຄົນຮາໂມ, ພໍ່ຂອງຊີເຄມສາ! ເປັນຫຍັງພວກເຮົາຈຶ່ງຮັບໃຊ້
ອາບີເມເຫລັກ?. 29ເຮົາຕ້ອງການໃຫ້ຄົນເມືອງນີ້ຢູ່ໃຕ້ການປົກຄອງຂອງເຮົາ! ແລ້ວເຮົາຈະຖອດອາບີເມເຫລັກອອກ". ເຮົາຈະເວົ້າກັບອາບີເມ-
ເຫລັກວ່າ, "ຈົ່ງເອີ້ນກອງທັບຂອງທ່ານອອກມາສາ."
30ເມື່ອເຊບູນ, ເຈົ້າເມືອງ, ໄດ້ຍິນຖ້ອຍຄຳຂອງກາອານລູກຊາຍເອເບັດ ໄດ້ກ່າວ ຄວາມໂກດແຄ້ນຂອງລາວກໍເພີ່ມຂຶ້ນ. 31ລາວໄດ້ສົ່ງຜູ້ສົ່ງຂ່າວໄປ
ຍັງອາບີເມເຫລັກ ເພື່ອຫລອກລວງ, ກ່າວວ່າ, "ເບິ່ງແມ, ກາອານລູກຊາຍເອເບັດ ແລະບັນດາຍາດພີ່ນ້ອງຂອງພວກເຂົາ ກຳລັງມາທີ່ເມືອງ
ຊີເຄມ, ແລະພວກເຂົາຍຸແຍ່ເມືອງນັ້ນໃຫ້ຕໍ່ສູ້ກັບທ່ານ.

[32]ບັດນີ້, ຂໍຈົ່ງລຸກຂຶ້ນໃນຕອນກາງຄືນ ທັງທ່ານ ແລະພວກທະຫານທີ່ຢູ່ກັບທ່ານ, ແລະກຽມຊຸ້ມຄອຍຖ້າໂຈມຕີຢູ່ໃນທົ່ງນາ.[33]ພໍຮອດຕອນເຊົ້າ,
ເມື່ອຕາເວັນຂຶ້ນ ຂໍຈົ່ງລຸກຂຶ້ນແຕ່ເຊົ້າໆ ແລະ ຮີບບຸກເຂົ້າໂຈມຕີເມືອງ. ເມື່ອລາວ ແລະກອງທັບຂອງລາວພ້ອມອອກມາຕໍ່ສູ້ກັບທ່ານ,
ກໍຈົ່ງເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້ ເພື່ອພວກເຂົາເຖີ້ນ".
[34]ແລ້ວອາບີເມເຫລັກ ກໍລຸກຂຶ້ນຕອນກາງຄືນ, ລາວ ແລະກອງທັບທັງຫມົດຂອງລາວ,
ແລະພວກເຂົາໄດ້ແບ່ງອອກເປັນສີ່ກອງຊຸ້ມຄອຍໂຈມຕີເມືອງຊີເຄມ.[35]ກາອານລູກຊາຍເອເບັດ ກໍໄດ້ອອກໄປ ແລະ ຢືນຢູ່ທີ່ທາງເຂົ້າປະຕູ
ເມືອງນັ້ນ. ອາບີເມເຫລັກ ແລະ ກອງທັບ ກໍໄດ້ອອກມາຈາກບ່ອນດັກຊຸ້ມຂອງພວກເຂົາ.
[36]ເມື່ອກາອານເຫັນກອງທັບເຫລົ່ານັ້ນ, ລາວຈຶ່ງເວົ້າກັບເຊບູນວ່າ, "ເບິ່ງແມ, ກອງທັບກຳລັງເຄື່ອນລົງມາຈາກຍອດພູເຂົາ" ເຊບູນຕອບລາວວ່າ
"ທ່ານກຳລັງເຫັນເງົາຂອງພູເຂົາເປັນເຫມືອນຄົນ".[37]ກາອານເວົ້າຂຶ້ນ ແລະກ່າວວ່າ "ເບິ່ງ, ກອງທັບກຳລັງລົງມາໃນກາງແຜ່ນດິນນັ້ນ, ແລະກອງ-
ທັບອີກກອງຫນຶ່ງກຳລັງລົງມາທາງຕົ້ນສົນແຫ່ງຜູ້ທຳນວາຍ".
[38]ແລ້ວເຊບູນກໍກ່າວກັບກາອານວ່າ, "ຕອນນີ້ ຖ້ອຍຄຳທີ່ໂອ້ອວດຂອງທ່ານ, ທ່ານຜູ້ທີ່ກ່າວວ່າ, 'ອາບີເມເຫລັກຄືຜູ້ໃດ ທີ່ເຮົາຕ້ອງຮັບໃຊ້ລາວ?'
ຄົນເຫລົ່ານີ້ເປັນຄົນທີ່ທ່ານຫມິ່ນປະຫມາດບໍ່ແມ່ນບໍ? ຈົ່ງຍົກທັບອອກໄປ ແລະ ສູ້ຮົບກັບພວກເຂົາສາ".[39]ກາອານກໍອອກໄປ ແລະ ລາວກໍນຳຫນ້າ
ກອງທັບຊີເຄມອອກໄປ, ແລະເຂົາໄດ້ຕໍ່ສູ້ກັບອາບີເມເຫລັກ.[40]ອາບີເມເຫລັກກໍຂັບໄລ່ຕາມລາວມາ ແລະ ກາອານກໍໄດ້ຫນີໄປຕໍ່ຫນ້າຕໍ່ຕາລາວ.
ຫລາຍຄົນໄດ້ບາດເຈັບລົ້ມຕາຍຂ້າງຫນ້າທາງເຂົ້າປະຕູເມືອງນັ້ນ.
[41]ອາບີເມເຫລັກ ໄດ້ອາໃສຢູ່ທີ່ເມືອງອາຣູມາ.ເຊບູນກໍຂັບໄລ່ກາອານກັບຍາດພີ່ນ້ອງຂອງພວກເຂົາອອກໄປຈາກເມືອງຊີເຄມ.[42]ໃນມື້ຕໍ່ມາຊາວ-
ເມືອງໄດ້ອອກໄປທີ່ທົ່ງນາ ແລະໄດ້ລາຍງານເລື່ອງນີ້ໃຫ້ອາບີເມເຫລັກຮູ້.[43]ລາວຈຶ່ງໄດ້ນຳເອົາຄົນຂອງລາວ, ແບ່ງພວກເຂົາອອກເປັນສາມກອງ,
ພວກເຂົາຊຸ້ມຄອຍໂຈມຕີຢູ່ທີ່ທົ່ງນາ. ລາວໄດ້ເຫັນຄົນເຫລົ່ານັ້ນ ກຳລັງອອກມາຈາກໃນເມືອງ ແລະລາວກໍໂຈມຕີ ແລະປະຫານພວກເຂົາ.
[44]ສ່ວນອາບີເມເຫລັກ ແລະພວກທະຫານທີ່ຢູ່ກັບລາວໄດ້ໂຈມຕີ ແລະປິດທາງເຂົ້າປະຕູເມືອງນັ້ນ. ຝ່າຍທະຫານອີກສອງກອງກໍບຸກເຂົ້າໂຈມຕີ
ທຸກຄົນທີ່ຢູ່ໃນທົ່ງນາ ແລະຂ້າພວກເຂົາ.[45]ອາບີເມເຫລັກໄດ້ໂຈມຕີເມືອງນັ້ນຫມົດມື້. ລາວຍຶດເມືອງນັ້ນ, ແລະຂ້າຟັນປະຊາຊົນທີ່ຢູ່ໃນເມືອງນັ້ນ.
ລາວໄດ້ທັງທຳລາຍເມືອງນັ້ນ ແລະຫວ່ານເກືອລົງໃນເມືອງນັ້ນ.
[46]ເມື່ອພວກຜູ້ນຳຫໍຄອຍທັງຫມົດແຫ່ງເມືອງຊີເຄມ ໄດ້ຍິນເລື່ອງນີ້, ພວກເຂົາກໍຫນີເຂົ້າໄປໃນທີ່ຫ້ອງໃຕ້ດິນໃນວັດຂອງພຣະບາອານເບຣິດ.[47]ອາ-
ບີເມເຫລັກໄດ້ຮັບແຈ້ງວ່າ ພວກຜູ້ນຳທັງຫົມດໄດ້ໄປຊຸມນຸມກັນຢູ່ທີ່ຫໍຄອຍແຫ່ງເມືອງຊີເຄມ.
[48]ອາບີເມເຫລັກໄດ້ຂຶ້ນໄປເທິງພູເຂົາຊານໂມນ, ລາວ ແລະ ຄົນທັງຫມົດທີ່ຢູ່ກັບລາວ. ອາບີເມເຫລັກຖືຂວານອັນຫນຶ່ງ ແລະຕັດກິ່ງໄມ້.
ລາວໄດ້ວາງມັນໃສ່ບ່າແບກມາ ແລະສັ່ງພວກຄົນທີ່ມາກັບລາວວ່າ, "ສິ່ງທີ່ພວກເຈົ້າເຫັນຂ້ອຍເຮັດ, ຈົ່ງຮີບຮ້ອນ ແລະ ເຮັດຕາມທີ່ຂອ້ຍເຮັດ
ສາ".[49]ດັ່ງນັ້ນ ທຸກຄົນກໍຕັດກິ່ງໄມ້ ແລະ ແບກຕາມອາບີເມເຫລັກ. ພວກເຂົາໄດ້ສຸມກິ່ງໄມ້ໄວ້ ທີ່ກຳແພງຂອງປ້ອມ, ແລະພວກເຂົາກໍຈຸດໄຟເຜົາ
ປ້ອມນັ້ນ, ດັ່ງນັ້ນ ມີປະຊາຊົນທັງຫມົດຂອງຫໍຊີເຄມກໍຕາຍຫມົດ, ປະມານຫນຶ່ງພັນຄົນທັງຊາຍ ແລະຍິງ.
[50]ດັ່ງນັ້ນ ອາບີເມເຫລັກໄດ້ໄປທີ່ເມືອງເທເບັດ ແລະລາວຕັ້ງຄ້າຍສູ້ຮົບກັບເມືອງເທເບັດ ແລະຍຶດເມືອງນັ້ນໄດ້.[51]ແຕ່ໃນເມືອງມີປ້ອມທີ່ແຂງ-
ແຮງໃນເມືອງນັ້ນ ແລະ ພວກຜູ້ຊາຍ ແລະພວກຜູ້ຍິງທັງຫມົດ ແລະຜູ້ນຳທຸກຄົນຂອງເມືອງໄດ້ຫນີໄປ ແລະປິດປະຕູຂັງຕົວເອງໄວ້. ແລ້ວພວກ-
ເຂົາກໍຂຶ້ນໄປເທິງຫລັງຄາຂອງປ້ອມນັ້ນ.
[52]ອາບີເມເຫລັກໄດ້ມາຮອດປອ້ມ ແລະໂຈມຕີປ້ອມນັ້ນ ແລະລາວໄດ້ເຂົ້າມາໃກ້ປະຕູປ້ອມໄດ້ແລ້ວ ເພື່ອຈະເອົາໄຟເຜົາ.[53]ແຕ່ມີຍິງສາວຄົນຫນຶ່ງ
ໄດ້ໂຍນກອ້ນຫີນຖີ້ມລົງຖືກຫົວອາບີເມເຫລັກ ແລະ ກະໂຫລກຫົວຂອງລາວແຕກ.[54]ແລ້ວລາວຈຶ່ງຟ້າວຮ້ອງບອກຄົນຫນຸ່ມທີ່ຖືອາວຸດຂອງຕົນມາ,
ແລະບອກວ່າ "ຈົ່ງຖືດາບຂອງເຈົ້າ ແລະຂ້າເຮົາເລີຍ, ເພື່ອຈະບໍ່ມີຄົນກ່າວກ່ຽວກັບເຮົາວ່າ, 'ຜູ້ຍິງຄົນຫນຶ່ງຂ້າເຮົາຕາຍ". ດັ່ງນັ້ນ ຊາຍຫນຸ່ມ
ຂອງລາວຄົນນັ້ນ ກໍແທງລາວຈົນຊອດ, ແລະລາວກໍເຖິງແກ່ຄວາມຕາຍ.
[55]ເມື່ອຄົນອິສະຣາເອນໄດ້ເຫັນວ່າ ອາບີເມເຫລັກຕາຍແລ້ວ, ພວກເຂົາກໍກັບເມືອບ້ານຂອງຕົນ.[56]ດັ່ງນີ້ ພຣະເຈົ້າ
ຊົງໄດ້ແກ້ແຄ້ນຄວາມຊົ່ວຮ້າຍຂອງອາບີເມເຫລັກທີ່ລາວໄດ້ເຮັດຕໍ່ພໍ່ຂອງຕົນ ໂດຍການຂ້າພີ່ນ້ອງເຈັດສິບຄົນຂອງຕົນ.[57]ພຣະເຈົ້າໄດ້ຊົງເຮັດໃຫ້
ຄວາມຊົ່ວຮ້າຍທັງຫມົດຂອງຊາວຊີເຄມໄດ້ຕົກຖືກຫົວຂອງພວກເຂົາທັງຫລາຍເອງ ແລະຄຳສາບແຊ່ງຂອງໂຢທາມລູກຊາຍຂອງເຢຣຸບບາອານ
ກໍຕົກຢູ່ເທິງພວກເຂົາທັງຫລາຍ.


generated on Tue Jun 17 19:01:42 2025

10 1ຕໍ່ຈາກອາບີເມເຫລັກ, ໂຕລາລູກຊາຍຂອງປູອາຜູ້ເປັນລູກຊາຍຂອງໂດໂດ, ຄົນອິດຊາຄາຜູ້ທີ່ໄດ້ອາໄສຢູ່ໃນເມືອງຊາມີໃນເຂດແດນພູເຂົາ
ເອຟຣາອິມ ໄດ້ລຸກຂຶ້ນມາຊ່ວຍອິສະຣາເອນໃຫ້ພົ້ນ. 2ລາວໄດ້ປົກຄອງອິສະຣາເອນເປັນເວລາຊາວສາມປີ. ລາວໄດ້ເສຍຊີວິດ
ແລະພວກເຂົາຝັງສົບລາວໄວ້ທີ່ເມືອງຊາມີ.

3ຕໍ່ຈາກລາວ ຄືຢາອີ ຄົນກີເລອາດ. ລາວໄດ້ຂຶ້ນມາປົກຄອງອິສະຣາເອນຢູ່ຊາວສອງປີ. 4ລາວມີລູກຊາຍສາມສິບຄົນ ຜູ້ທີ່ ຂີ່ລູກລາສາມສິບໂຕ,
ແລະພວກເຂົາມີເມືອງຢູ່ສາມສິບຫົວເມືອງທີ່ຢູ່ໃນແຜ່ນດິນກີເລອາດ, ຊຶ່ງໄດ້ເອີ້ນວ່າ ເມືອງຮາໂວດ-ຢາອີ ຈົນຮອດທຸກມື້ນີ້. 5ຢາອີໄດ້ເສຍຊີວິດ
ແລະຖືກຝັງໄວ້ທີ່ເມືອງກາໂມນ.
6ຄົນອິສະຣາເອນກໍເຮັດຊົ່ວໃນສິ່ງທີ່ພວກເຂົາໄດ້ເຮັດຫລາຍຂຶ້ນ ໃນສາຍຕາຂອງພຣະຢາເວ ແລະໄດ້ນະມັດສະການພຣະບາອານທັງຫລາຍ,
ພຣະອັດຊະຕາກ, ພຣະຂອງຄົນຊີເຣຍ, ພຣະຂອງເມືອງຊີໂດນ, ພຣະຂອງຄົນໂມອາບ, ພຣະຂອງຄົນອຳໂມນ, ແລະ ພຣະຂອງຄົນຟີລິດສະ-
ຕິນ. ພວກເຂົາທັງຫລາຍປະຖິ້ມພຣະຢາເວ ແລະບໍ່ໄດ້ນະມັດສະການພຣະອົງອີກ. 7ພຣະພິໂລດຂອງພຣະຢາເວ ກໍຮ້ອນຂຶ້ນຕໍ່ອິສະຣາເອນ,
ແລະພຣະອົງຈຶ່ງໄດ້ຊົງຂາຍພວກເຂົາໄວ້ໃນມືຂອງຄົນຟີລິດສະຕິນ ແລະໃນມືຂອງຄົນອຳໂມນ.
8ພວກເຂົາໄດ້ບີບບັງຄັບ ແລະຂົ່ມເຫັງຄົນອິສະຣາເອນໃນປີນັ້ນ, ແລະພວກເຂົາຂົ່ມເຫັງຄົນອິສະຣາເອນທັງຫມົດທີ່ຢູ່ຟາກຫນຶ່ງຂອງແມ່ນ້ຳຈໍ-
ແດນໃນແຜ່ນດິນຂອງຄົນອະໂມຣິດ, ທີ່ຢູ່ໃນກີເລອາດເປັນເວລາສິບແປດປີ. 9ແລ້ວຄົນອຳໂມນໄດ້ຂ້າມແມ່ນ້ຳຈໍແດນ ເພື່ອໄປສູ້ຮົບກັບຢູດາ, ສູ້
ຮົບກັບເບັນຢາມິນ ແລະສູ້ຮົບກັບວົງວານຂອງເອຟຣາອິມ, ດັ່ງນັ້ນ ຄົນອິສະຣາເອນຈຶ່ງໄດ້ຮັບຄວາມເດືອດຮ້ອນຢ່າງຍິ່ງ.
10ແລ້ວຄົນອິສະຣາເອນຮ້ອງທຸກຕໍ່ພຣະຢາເວວ່າ, “ຖ້າພວກຂ້ານ້ອຍທັງຫລາຍໄດ້ເຮັດບາບຕໍ່ພຣະອົງແລ້ວ, ເພາະວ່າພວກຂ້ານ້ອຍໄດ້ປະຖິ້ມ
ພຣະເຈົ້າຂອງພວກຂ້ານ້ອຍໄປ ແລະໄດ້ນະມັດສະການບັນດາພຣະບາອານ”. 11ພຣະຢາເວໄດ້ຊົງກ່າວກັບຄົນອິສະຣາເອນວ່າ, “ເຮົາບໍ່ໄດ້
ຊ່ວຍພວກເຈົ້າໃຫ້ພົ້ນຈາກຊາວເອຢິບ, ຈາກຄົນອາໂມຣິດ, ຈາກຄົນອຳໂມນ ແລະຈາກຄົນຟີລິດສະຕິນ. 12ແລະຈາກຄົນຊີໂດນ ຫລືບໍ່? ຄົນອາ-
ມາເຫລັກ ແລະຄົນມາໂອນ ໄດ້ບີບບັງຄັບພວກເຈົ້າ; ພວກເຈົ້າໄດ້ທູນຂໍຕໍ່ເຮົາ, ແລະເຮົາໄດ້ຊ່ວຍພວກເຈົ້າໃຫ້ພົ້ນຈາກອຳນາດຂອງພວກເຂົາ.
13ເຖິງຢ່າງນັ້ນ ພວກເຈົ້າໄດ້ປະຖິ້ມເຮົາອີກ ແລະນະມັດສະການພຣະອື່ນ. ເຫດນັ້ນ, ເຮົາຈຶ່ງຈະບໍ່ຊ່ວຍພວກເຈົ້າໃຫ້ພົ້ນອີກຕໍ່ໄປ. 14ຈົ່ງໄປ
ແລະທູນຂໍຕໍ່ພຣະຕ່າງໆ ທີ່ພວກເຈົ້າໄດ້ນະມັດສະການ. ໃຫ້ພຣະເຫລົ່ານັ້ນ ຊ່ວຍພວກເຈົ້າໃຫ້ພົ້ນໃນຍາມພວກເຈົ້າໄດ້ຮັບຄວາມທຸກລຳບາກນີ້”
15ຄົນອິສະຣາເອນໄດ້ກາບທູນຕໍ່ພຣະຢາເວວ່າ, “ພວກຂ້ານ້ອຍທັງຫລາຍ ໄດ້ເຮັດບາບແລ້ວ. ຂໍພຣະອົງຊົງເຮັດແກ່ພວກຂ້ານ້ອຍຕາມທີ່ພຣະອົງ
ເຫັນດີເຖີ້ນ. ແຕ່ຂໍຊົງໂຜດຊ່ວຍພວກເຮົາໃນມື້ນີ້ເຖີ້ນ”. 16ພວກເຂົາ ໄດ້ກຳຈັດພຣະຕ່າງດ້າວຕ່າງໆ ທີ່ຢູ່ທ່າມກາງພວກເຂົາອອກໄປ ແລະ
ນະມັດສະການພຣະຢາເວ. ຝ່າຍພຣະອົງຊົງທຸກຮ້ອນໃຈ ດ້ວຍຄວາມທຸກຍາກຂອງອິສະຣາເອນ.
17ແລ້ວຄົນອຳໂມນກໍໄດ້ມາຊຸມນຸມກັນ ແລະຕັ້ງຄ້າຍ ໃນກີເລອາດ. ຄົນອິສະຣາເອນກໍມາພ້ອມກັນ ແລະຕັ້ງຄ້າຍຢູ່ທີ່ມິຊະປາ. 18ພວກຜູ້ນຳອິສະ
ຣາເອນຂອງຄົນກີເລອາດເວົ້າກັນວ່າ, “ຜູ້ໃດທີ່ຈະເປັນຄົນທຳອິດອອກໄປສູ້ຮົບກັບຄົນອຳໂມນກ່ອນ? ລາວຈະໄດ້ເປັນ
ຜູ້ນຳເຫນືອທັງຫມົດທີ່ອາໄສຢູ່ໃນກີເລອາດ”.

 generated on Tue Jun 17 19:01:42 2025

11 1ໃນຕອນນີ້ ເຢັບທາຄົນກີເລອາດ ເປັນທະຫານຜູ້ກ້າ, ແຕ່ລາວເປັນລູກຊາຍຂອງຍິງໂສເພນີ. ກີເລອາດເປັນພໍ່ຂອງລາວ.2ເມຍຂອງກີເລອາດ
ຍັງໄດ້ເກີດລູກຊາຍອີກຫລາຍຄົນ.ເມື່ອພວກລູກຊາຍຂອງເມຍຂອງລາວນັ້ນໃຫຍ່ຂຶ້ນແລ້ວ, ພວກເຂົາໄດ້ຂັບໄລ່ເຢັບທາອອກຈາກເຮືອນໄປ
ແລະໄດ້ກ່າວກັບລາວວ່າ “ເຈົ້າບໍ່ມີສ່ວນໃນມໍຣະດົກໃດໆຂອງຄອບຄົວພວກເຮົາ. ເພາະວ່າເຈົ້າເປັນລູກຊາຍຂອງຍິງຄົນອື່ນ”.3ດັ່ງນັ້ນ, ເຢັບທາ
ຈຶ່ງໄດ້ຫນີຈາກພີ່ນ້ອງຂອງລາວ ແລະໄປອາໃສຢູ່ທີ່ແຜ່ນດິນໂຕບ. ພວກນັກເລງອັດຕະພານ ກໍໄດ້ເຂົ້າຮ່ວມກັບເຢັບທາ ແລະພວກເຂົາໄດ້ມາ
ແລະໄປນຳເຂົາ.

4ຫລາຍວັນຕໍ່ມາ, ຄົນອຳໂມນໄດ້ເຮັດສົງຄາມກັບຄົນອິສະຣາເອນ.5ຂະນະທີ່ຄົນອຳໂມນເຮັດສົງຄາມກັບຄົນອິສະຣາເອນນັ້ນ, ພວກຜູ້ໃຫຍ່ຂອງ
ເມືອງກີເລອາດໄດ້ໄປພາເຢັບທາມາຈາກແຜ່ນດິນໂຕບ.6ພວກເຂົາໄດ້ກ່າວແກ່ເຢັບທາວ່າ, “ຈົ່ງກັບມາ ແລະເປັນຜູ້ນຳຂອງພວກເຮົາເຖີ້ນ
ເພື່ອພວກເຮົາຈະຕໍ່ສູ້ກັບຄົນອຳໂມນໄດ້”
7ເຢັບທາໄດ້ກ່າວກັບພວກຜູ້ນຳຂອງກີເລອາດວ່າ, “ພວກທ່ານກຽດຊັງຂອ້ຍ ແລະໄດ້ຂັບໄລ່ຂ້ອຍໃຫ້ອອກຈາກເຮືອນຂອງພໍ່ຂ້ອຍ. ບັດນີ້
ເປັນຫຍັງພວກທ່ານຈຶ່ງມາຫາຂ້ອຍ ຕອນທີ່ພວກທ່ານປະສົບກັບຄວາມລຳບາກ?”.8ພວກຜູ້ນຳຂອງກີເລອາດໄດ້ຕອບເຢັບທາວ່າ,
“ເຫດຜົນທີ່ພວກເຮົາກັບມາຫາເຈົ້າໃນຕອນນີ້; ຂໍຈົ່ງກັບມາກັບພວກເຮົາ ແລະສູ້ຮົບກັບຄົນອຳໂມນ
ແລະເຈົ້າຈະໄດ້ເປັນຜູ້ນຳເຫນືອທຸກຄົນທີ່ອາໄສຢູ່ໃນກີເລອາດ”.
9ເຢັບທາຈຶ່ງໄດ້ກ່າວກັບພວກຜູ້ໃຫຍ່ຂອງກີເລອາດວ່າ, “ຖ້າພວກທ່ານນຳຂ້ອຍກັບເຮືອນອີກເພື່ອສູ້ຮົບກັບຄົນອຳໂມນ ແລະຖ້າພຣະຢາເວໄດ້
ມອບພວກເຮົາມີໄຊນະນະເຫນືອພວກເຂົາ, ຂ້ອຍຈະເປັນຜູ້ນຳຂອງພວກທ່ານ”.10ພວກຜູ້ໃຫຍ່ຂອງກີເລອາດຈຶ່ງຕອບເຢັບທາວ່າ, “ຂໍພຣະຢາເວ
ເປັນພະຍານລະຫວ່າງພວກເຮົາ ຖ້າຫາກພວກເຮົາ ບໍ່ໄດ້ເຮັດຕາມທີ່ພວກເຮົາເວົ້າ!”.11ດັ່ງນັ້ນ ເຢັບທາຈຶ່ງໄປກັບພວກຜູ້ໃຫຍ່ຂອງກີເລອາດ,
ແລະປະຊາຊົນກໍແຕ່ງຕັ້ງໃຫ້ລາວເປັນຜູ້ນຳ ແລະຜູ້ບັນຊາການຂອງເຫນືອພວກເຂົາ. ແລ້ວເຢັບທາກໍກ່າວ
ຢ້ຳອີກຄັ້ງເຖິງຄຳຫມັ້ນສັນຍາທັງຫມົດທີ່ລາວໄດ້ເຮັດ ເມື່ອລາວຢູ່ຕໍ່ຫນ້າພຣະຢາເວທີ່ເມືອງມີຊະປາ.
12ແລ້ວເຢັບທາຈຶ່ງສົ່ງຜູ້ສົ່ງຂ່າວໄປຍັງກະສັດຂອງຊາວອຳໂມນ, ຖາມວ່າ “ຄວາມຂັດແຍ້ງຄັ້ງນີ້ລະຫວ່າງພວກເຮົາແມ່ນຫຍັງ? ເປັນຫຍັງທ່ານຈຶ່ງ
ຍົກທັບມາຕໍ່ສູ້ ເພື່ອຢຶດເອົາແຜ່ນດິນຂອງພວກເຮົາ”.13ກະສັດຂອງຄົນອຳໂມນຕອບກັບຜູ້ສົ່ງຂ່າວຂອງເຢັບທາວ່າ, “ເພາະວ່າເມື່ອອິສະ
ຣາເອນໄດ້ອອກຈາກເອຢິບ, ພວກເຂົາໄດ້ຢຶດແຜ່ນດິນຂອງເຮົາໄປ ຕັ້ງແຕ່ແມ່ນ້ຳອາກໂນນເຖິງແມ່ນ້ຳຢັບໂບກ, ແລະຮອດແມ່ນ້ຳຈໍແດນ. ບັດນີ້
ຈົ່ງຄືນແຜ່ນດິນເຫລົ່ານັ້ນໃຫ້ກັບເຮົາໂດຍດີ.”
14ເຢັບທາໄດ້ສົ່ງຜູ້ສົ່ງຂ່າວໄປຫາກະສັດຄົນອຳໂມນອີກຄັ້ງ.15ແລະລາວໄດ້ກ່າວວ່າ, “ນີ້ແມ່ນຖ້ອຍຄຳຂອງເຢັບທາ ກ່າວວ່າ: ອິສະຣາເອນບໍ່ໄດ້ຢຶດ
ແຜ່ນດິນຂອງໂມອາບ ແລະແຜ່ນດິນຂອງຄົນອຳໂມນ.16ແຕ່ພວກເຂົາໄດ້ມາຈາກເອຢິບ, ແລະ ອິສະ
ຣາເອນໄດ້ເດີນທາງຖິ່ນແຫ້ງແລ້ງກັນດານໄປຮອດທະເລແດງ ແລະໄປຍັງກາເດັດ.
17ເມື່ອອິສະຣາເອນ ໄດ້ສົ່ງຜູ້ສົ່ງຂ່າວໄປຍັງກະສັດແຫ່ງເອໂດມ, ກ່າວວ່າ, 'ຂໍໂຜດໃຫ້ພວກເຮົາເດີນທາງຜ່ານດິນແດນຂອງທ່ານໄປເຖີ້ນ',
ກະສັດເອໂດມ ກໍບໍ່ຟັງ. ແລ້ວພວກເຂົາຍັງໄດ້ສົ່ງຜູ້ສົ່ງຂ່າວໄປຫາກະສັດແຫ່ງໂມອາບ, ແຕ່ເພິ່ນກໍໄດ້ປະຕິເສດ. ດັ່ງນັ້ນ ອິສະ
ຣາເອນຈຶ່ງຍັງຄົງພັກທີ່ກາເດັດ.18ຫລັງຈາກນັ້ນພວກເຂົາ ກໍໄດ້ເດີນທາງໄປໃນຖິ່ນແຫ້ງແລ້ງກັນດານ ແລະໄດ້ຫນີອອກຈາກແຜ່ນດິນເອໂດມ
ແລະແຜ່ນດິນໂມອາບ ແລະພວກເຂົາໄດ້ເດີນທາງໄປທາງທິດຕາເວັນອອກຂອງແຜ່ນດິນໂມອາບ
ແລະພວກເຂົາໄດ້ຕັ້ງຄ້າຍພັກຢູ່ອີກຟາກຫນຶ່ງຂອງອາກໂນນ. ແຕ່ພວກເຂົາບໍ່ໄດ້ເຂົ້າໄປໃນດິນແດນຂອງໂມອາບ,
ເພາະວ່າອາກໂນນເປັນເຂດແດນຂອງໂມອາບ.
19ອິສະຣາເອນຈຶ່ງສົ່ງຜູ້ສົ່ງຂ່າວໄປຫາສີໂຫນ, ກະສັດຄົນອາໂມຣິດ, ຜູ້ທີ່ປົກຄອງເມືອງເຮັດຊະໂບນ; ອິສະຣາເອນກ່າວກັບລາວວ່າ, ‘ຂໍໂຜດໃຫ້
ພວກເຮົາຜ່ານແຜ່ນດິນຂອງທ່ານໄປທີ່ຊຶ່ງເປັນດິນແດນຂອງພວກເຮົາເຖີ້ນ’.20ແຕ່ສີໂຫນບໍ່ວາງໃຈຄົນອິດສະຣາເອນເດີນທາງຜ່ານເຂດ-
ແດນຂອງຕົນ. ສະນັ້ນ ສີໂຫນຈຶ່ງເຕົ້າໂຮມກອງທັບຂອງລາວ ແລະຍົກກອງທັບໄປທີ່ຢາຮາດ ແລະລາວໄດ້ສູ້ຮົບກັບຄົນອິສະຣາເອນທີ່ນັ້ນ.
21ແລະພຣະຢາເວ, ພຣະເຈົ້າຂອງຄົນອິສະຣາເອນ,ໄດ້ມອບເມືອງສີໂຫນ ແລະປະຊາຊົນທັງຫມົດຂອງລາວໄວ້ໃນມືອິສະຣາເອນ
ແລະພວກເຂົາໄດ້ຊະນະຄົນສີໂຫນ. ດັ່ງນັ້ນ ອິສະຣາເອນຈຶ່ງຢຶດຄອງແຜ່ນດິນທັງຫມົດຂອງຄົນອາໂມຣິດຜູ້ທີ່ອາໄສຢູ່ໃນແຜ່ນດິນນັ້ນ.22ພວກ-
ເຂົາຍຶດຄອງທຸກສິ່ງທີ່ຢູ່ເຂດແດນທັງຫມົດຂອງຄົນອາໂມຣິດ, ຕັ້ງແຕ່ແມ່ນ້ຳອາກໂນນຮອດແມ່ນ້ຳຢັບໂບກ, ແລະຕັ້ງແຕ່ຖິ່ນແຫ້ງແລ້ງກັນດານ
ໄປຈົນຮອດແມ່ນ້ຳຈໍແດນ.
23ຈາກນັ້ນ ພຣະຢາເວ, ພຣະເຈົ້າຂອງຄົນອິສະຣາເອນ, ໄດ້ຊົງຂັບໄລ່ຄົນອາໂມຣິດອອກຕໍ່ຫນ້າອິສະຣາເອນຂອງພຣະອົງ, ບັດນີ້ ທ່ານຄວນຈະ
ຢຶດຄອງເອົາແຜ່ນດິນຂອງພວກເຂົາບໍ?.24ທ່ານຈະບໍ່ຄອງແຜ່ນດິນທີ່ພຣະເຄໂມດ, ພຣະຂອງທ່ານໄດ້ມອບໃຫ້ໃຫ້ແກ່ທ່ານ? ດັ່ງນັ້ນ
ແຜ່ນດິນໃດກໍຕາມທີ່ພຣະຢາເວ, ພຣະເຈົ້າຂອງພວກເຮົາໄດ້ມອບແກ່ພວກເຮົາ, ພວກເຮົາຈະຢຶດຄອງເອົາ.25ບັດນີ້ ທ່ານຈະດີກວ່າບາຫລາກລູກ-
ຊາຍຂອງຊິບໂປ, ກະສັດເມືອງໂມອາບບໍ? ລາວກ້າທີ່ຈະໂກດຮ້າຍກັບອິສະຣາເອນບໍ? ລາວເຄີຍເຮັດເສິກກັບຄົນອິສະຣາເອນບໍ?
26ຂະນະທີ່ຄົນອິສະຣາເອນ ອາໃສຢູ່ໃນເມືອງເຮັດຊະໂບນ ແລະຫມູ່ບ້ານຕ່າງໆຂອງເມືອງນັ້ນ ເປັນເວລາສາມຮ້ອຍປີ, ແລະໃນເມືອງອາໂຣເອ
ແລະຫມູ່ບ້ານຂອງເມືອງນັ້ນ ແລະຢູ່ໃນບັນດາຫົວເມືອງທີ່ຕັ້ງຢູ່ຕາມຝັ່ງແມ່ນ້ຳອາກໂນນ- ເປັນຫຍັງທ່ານຈຶ່ງບໍ່ເອົາພວກເຂົາກັບຄືນມາໃນຊ່ວງເວ-
ລານັ້ນ?.27ຂ້ອຍບໍ່ເຄີຍໄດ້ເຮັດຄວາມຜິດຕໍ່ທ່ານ, ແຕ່ທ່ານໄດ້ເຮັດຄວາມຜິດຕໍ່ຂ້ອຍ ທີ່ມາໂຈມຕີຂ້ອຍ. ຂໍພຣະຢາເວ, ຜູ້ຊົງເປັນຜູ້ພິພາກສາ,
ຈະຊົງຕັດສິນຄວາມລະຫວ່າງຄົນອິສະຣາເອນ ແລະຄົນອຳໂມນໃນມື້ນີ້”28ແຕ່ກະສັດຂອງຄົນອຳໂມນບໍ່ໄດ້ຟັງຄຳເຕືອນຂອງເຢັບທາ ໄດ້ສົ່ງໄປ
ໃຫ້ເຂົາ.
29ຫລັງຈາກນັ້ນ, ພຣະວິນຍານຂອງພຣະຢາເວ ໄດ້ສະເດັດມາສະຖິດຢູ່ກັບເຢັບທາ, ແລະ ລາວຈຶ່ງເດີນທາງຜ່ານກີເລອາດ ແລະມານາເຊ, ແລະ
ຜ່ານມີຊະປາແຫ່ງກີເລອາດ, ແລະຈາກມີຊະປາແຫ່ງກີເລອາດ, ລາວໄດ້ເດີນທາງຕໍ່ໄປຮອດບ່ອນຄົນອຳໂມນ.30ເຢັບທາໄດ້ປະຕິຍານຕໍ່ພຣະ-
ຢາເວ ແລະກ່າວວ່າ, “ຖ້າຫາກພຣະອົງມອບໄຊນະນະແກ່ຂ້ານ້ອຍເຫນືອຄົນອຳໂມນ,31ແລ້ວຜູ້ໃດກໍຕາມທີ່ອອກມາຈາກປະຕູເຮືອນຂອງຂ້າ
ນ້ອຍ ເພື່ອຕ້ອນຮັບຂ້ານ້ອຍ ເມື່ອຂ້ານ້ອຍກັບມາຈາກຄົນອຳໂມນດ້ວຍຄວາມສະຫງົບ ຜູ້ນັ້ນຈະຕ້ອງເປັນຂອງພຣະຢາເວ ແລະຂ້ານ້ອຍຈະ
ຖວາຍຜູ້ນັ້ນເປັນເຄື່ອງເຜົາບູຊາ”

[32]ດັ່ງນັ້ນ ເຢັບທາຈຶ່ງໄດ້ເດີນທາງໄປຍັງຄົນອຳໂມນ ເພື່ອສູ້ຮົບກັບພວກເຂົາ, ແລະພຣະຢາເວ ໄດ້ມອບໄຊນະນະແກ່ພວກເຂົາ.[33]ແລະລາວໄດ້
ໂຈມຕີຄົນເຫລົ່ານັ້ນ ແລະເຮັດໃຫ້ເກີດການຂ້າຟັນຢ່າງຫລວງຫລາຍຈາກເມືອງອາໂຣເອໄປໃກ້ໆເຖິງເມືອງມິນນິດ ລວມຊາວຫົວເມືອງ ແລະໄປ
ຈົນເມືອງອາເບັນ ເກຣາມິນ. ດັ່ງນັ້ນ ຄົນອຳໂມນຈຶ່ງໄດ້ຕົກຢູ່ພາຍໃຕ້ອຳນາດຂອງຄົນອິສະຣາເອນ.
[34]ເຢັບທາ ໄດ້ກັບມາເຖິງເຮືອນຂອງລາວທີ່ເມືອງມິຊະປາ, ແລະລູກສາວຂອງລາວກໍໄດ້ຕີກອງ, ແລະເຕັ້ນລຳອອກມາຕ້ອນຮັບລາວ. ນາງເປັນລູກ
ຄົນດຽວຂອງລາວ, ແລະນອກຈາກລູກສາວຄົນນີ້ ລາວບໍ່ມີລູກຊາຍ ແລະລູກສາວອີກເລີຍ.[35]ທັນທີທີ່ລາວເຫັນນາງ, ລາວກໍຈີກເສື້ອຜ້າຂອງຕົນ,
ແລະກ່າວວ່າ, “ໂອຍ! ລູກສາວຂອງພໍ່! ເຈົ້າເຮັດໃຫ້ພໍ່ມີຄວາມໂສກເສົ້າ, ແລະເຈົ້າເປັນເຫດໃຫ້ພໍ່ເຈັບປວດ! ເພາະວ່າພໍ່ໄດ້ປະຕິຍານຕໍ່ພຣະ-
ຢາເວໄວ້ແລ້ວ, ແລະພໍ່ບໍ່ສາມາດຄືນຄຳສັນຍາຂອງພໍ່ໄດ້”
[36]ນາງຈຶ່ງກ່າວກັບພໍ່ວ່າ, “ພໍ່ຂອງລູກ, ເມື່ອພໍ່ໄດ້ປະຕິຍານຕໍ່ພຣະຢາເວແລ້ວ ກໍຈົ່ງເຮັດທຸກຢ່າງຕາມທີ່ພໍ່ໄດ້ສັນຍາໄວ້ເຖີ້ນ ເພາະພຣະຢາເວໄດ້
ຊ່ວຍເຮັດການແກ້ແຄ້ນຕໍ່ຄົນອຳໂມນສັດຕຣູຂອງພໍ່ໃຫ້ກັບພໍ່ແລ້ວ”.[37]ນາງເວົ້າກັບພໍ່ຂອງນາງວ່າ, “ຂໍໃຫ້ພໍ່ຮັກສາສັນຍານີ້ແກ່ລູກເຖີ້ນ. ຂໍປ່ອຍໃຫ້
ລູກຢູ່ລຳພັງຈັກສອງເດືອນ, ເພື່ອລູກຈະໄດ້ຈາກໄປ ແລະລົງໄປເທິງພູເຂົາແລະຮ້ອງໄຫ້ຄ່ຳຄວນເຖິງຄວາມເປັນພົມມະຈາລີຂອງລູກ, ທັງລູກກັບ
ເພື່ອນໆຂອງລູກ”
[38]ລາວໄດ້ກ່າວວ່າ, “ຈົ່ງໄປສາ”. ລາວໄດ້ປ່ອຍນາງໄປເປັນເວລາສອງເດືອນ. ນາງກໍຈາກລາວໄປ, ນາງ ແລະເພື່ອນໆຂອງນາງ, ແລະພວກເຂົາ ກໍ-
ພາກັນຮ້ອງໄຫ້ຄ່ຳຄວນເຖິງຄວາມເປັນພົມມະຈາລີຂອງນາງເທິງພູເຂົານັ້ນ.[39]ຢູ່ມາເມື່ອຄົບສອງເດືອນແລ້ວ ນາງກໍກັບມາຫາພໍ່ຂອງນາງ, ຜູ້ທີ່ເຮັດ
ກັບນາງຕາມຄຳສັນຍາທີ່ໄດ້ປະຕິຍານໄວ້. ໃນເວລານັ້ນ ນາງຍັງບໍ່ເຄີຍສົມສູ່ກັບຊາຍໃດເລີຍ, ແລະເລື່ອງນີ້ຈຶ່ງໄດ້ກາຍເປັນທຳນຽມໃນອິສະ
ຣາເອນ.[40]ທີ່ທຸກໆປີ ພວກລູກສາວຊາວອິສະຣາເອນ, ຈະເລົ່າເລື່ອງຂອງລູກສາວຂອງເຢັບທາຄົນກີເລອາດເປັນເວລາສີ່ມື້.

12 [1]ມີສຽງເອີ້ນອອກໄປເຖິງຄົນເອຟຣາອິມ; ພວກເຂົາໄດ້ຜ່ານເມືອງຊາໂຟນ ແລະກ່າວກັບເຢັບທາວ່າ, “ເຫດໃດທ່ານຈຶ່ງຍົກທັບຂ້າມໄປສູ້
ຮົບກັບຄົນອຳໂມນແລະບໍ່ໄດ້ເອີ້ນພວກເຮົາໄປກັບທ່ານ? ພວກເຮົາຈະຈູດໄຟເຜົາເຮືອນຂອງທ່ານ ໃຫ້ພັງລົງມາທັບຕົວທ່ານ”.[2]ເຢັບທາຈຶ່ງ
ຕອບພວກເຂົາວ່າ, “ຂ້ອຍກັບປະຊາຊົນຂອງຂ້ອຍໄດ້ຢູ່ໃນການສູ້ຮົບຄັ້ງໃຫຍ່ກັບຄົນອຳໂມນ. ເມື່ອຂ້ອຍເອີ້ນພວກທ່ານ, ພວກທ່ານບໍ່ໄດ້ຊ່ວຍ
ພວກເຮົາໃຫ້ພົ້ນຈາກພວກເຂົາ.

[3]ເມື່ອຂ້ອຍເຫັນວ່າພວກທ່ານບໍ່ຊ່ວຍຂ້ອຍ, ແລ້ວຂ້ອຍຈຶ່ງໄດ້ສ່ຽງຊີວິດດ້ວຍກຳລັງຂອງຂ້ອຍເອງ ແລະຍົກທັບຂວ້າມໄປສູ້ຮົບກັບຄົນອຳໂມນ,
ແລະພຣະຢາເວໄດ້ມອບໄຊຊະນະແກ່ຂ້ອຍ.ເຫດໃດ ພວກທ່ານ ຈຶ່ງໄດ້ມາສູ້ຮົບກັບຂ້ອຍໃນມື້ນີ້?".[4]ເຢັບທາຈຶ່ງຮວບຮວມບັນດາຊາວກີເລອາດ
ແລະລາວກໍໄດ້ສູ້ຮົບກັບຄົນເອຟຣາອິມ. ຄົນກີເລອາດກໍໄດ້ໂຈມຕີຄົນເອຟຣາອິມ ເພາະວ່າພວກເຂົາກ່າວວ່າ, “ເຈົ້າຊາວກີເລອາດ ເປັນພວກຄົນ
ຫລົບຫນີໄພໃນເອຟຣາອິມທັງໃນທ່າມກາງຄົນເອຟຣາອິມ ແລະມານາເຊ”
[5]ຄົນກີເລອາດກໍເຂົ້າຍຶດທ່າຂ້າມແມ່ນ້ຳຈໍແດນ ທີ່ຂ້າມໄປຫາເອຟຣາອິມ. ເມື່ອມີຄົນເອຟຣາອິມທີ່ລອດຊີວິດຄົນໃດໄດ້ກ່າວວ່າ, “ຂໍໃຫ້ຂ້ອຍ
ຂ້າມແມ່ນ້ຳໄປນຳແດ່, ” ຄົນກີເລອາດກໍຖາມລາວວ່າ “ເຈົ້າເປັນຄົນເອຟຣາອິມບໍ?”, ເມື່ອລາວຕອບວ່າ “ບໍ່ແມ່ນ”.[6]ແລ້ວພວກເຂົາເວົ້າວ່າ “ຈົ່ງ
ເວົ້າຄຳວ່າຊິບໂບເຫລັດ”, ແລະຖ້າລາວເວົ້າວ່າ “ຊິບໂບເຫລັດ” (ເພາະວ່າຄົນເອຟຣາອິມບໍ່ສາມາດອອກສຽງຄຳນີ້ໄດ້ຖືກຕ້ອງ),
ຄົນກີເລອາດຈະຈັບກຸມ ແລະຂ້າຢູ່ທ່າຂ້າມແມ່ນ້ຳຈໍແດນ. ໃນເວລານັ້ນຄົນເອຟຣາອິມໄດ້ຖືກຂ້າຕາຍສີ່ຫມື່ນສອງພັນຄົນ.
[7]ເຢັບທາໄດ້ປົກຄອງອິສະຣາເອນເປັນເວລາຫົກປີ. ແລ້ວເຢັບທາຊາວກີເລອາດກໍເສຍຊີວິດ ແລະຖືກຝັງໄວ້ຢູ່ຫົວເມືອງຫນຶ່ງໃນ
ເມືອງຂອງກີເລອາດ.
[8]ຕໍ່ຈາກເຢັບທາມາ, ຄືອິບຊັນແຫ່ງເບັດເລເຮັມໄດ້ປົກຄອງອິສະຣາເອນ.[9]ລາວມີລູກຊາຍສາມສິບຄົນ. ລາວໄດ້ຍົກລູກສາວສາມສິບຄົນໃຫ້ແຕ່ງ-
ງານອອກໄປ ແລະລາວໄດ້ຮັບລູກສາວສາມສິບຄົນຂອງຄົນອື່ນ, ຈາກເຜົ່າອື່ນມາໃຫ້ກັບບັນດາລູກຊາຍຂອງຕົນ. ລາວໄດ້ປົກຄອງອິສະຣາເອນ
ເປັນເວລາເຈັດປີ.
[10]ແລ້ວອິບຊັນກໍເສຍຊີວິດຖືກຝັງໄວ້ທີ່ເບັດເລເຮັມ.[11]ຕໍ່ມາ ເອໂລນຄົນເຊບູໂລນໄດ້ປົກຄອງອິສະຣາເອນ ແລະລາວໄດ້ປົກຄອງອິສະ
ຣາເອນເປັນເວລາສິບປີ.[12]ແລ້ວເອໂລນຄົນເຊບູໂລນກໍເສຍຊີວິດ ແລະຖືກຝັງໄວ້ທີ່ໄອຢາໂລນໃນແຜ່ນດິນຂອງຄົນເຊບູໂລນ.
[13]ຕໍ່ມາ ອັບໂດນລູກຊາຍຮິນເລນຊາວປີຣາໂທນໄດ້ຂຶ້ນປົກຄອງອິສະຣາເອນ.[14]ລາວມີລູກຊາຍສີ່ສິບຄົນ ແລະຫລານຊາຍສາມສິບຄົນ.
ພວກເຂົາໄດ້ຂີ່ລາເຈັດສິບໂຕ, ແລະລາວໄດ້ປົກຄອງອິສະຣາເອນເປັນເວລາແປດປີ.[15]ຕໍ່ມາອັບໂດນລູກຊາຍຮິນເລນຊາວປີຣາໂທນກໍເສຍຊີວິດ
ແລະຖືກຝັງໄວ້ຢູ່ປີຣາໂທນໃນແຜ່ນດິນຂອງເອຟຣາອິມຢູ່ເທິງພູເຂົາຂອງຄົນອາມາເລກ.

# 13

1ຄົນອິສະຣາເອນໄດ້ເຮັດບາບຕໍ່ໃນສາຍຕາຂອງພຣະເຢວາອີກ, ແລະພຣະອົງຈຶ່ງຊົງມອບພວກເຂົາຢູ່ໃຕ້ອຳນາດຂອງພວກຟີລິດສະຕິນເປັນ
ເວລາສີ່ສິບປີ. 2ມີຊາຍຄົນຫນຶ່ງມາຈາກເມືອງໂຊຣາ, ເປັນຄົນຢູ່ໃນຕະກູນເຜົ່າດານ, ຊື່ມາໂນອາ.ເມຍຂອງລາວບໍ່ສາມາດຖືພາໄດ້, ດັ່ງນັ້ນ
ນາງຈຶ່ງບໍ່ມີລູກ.

3ທູດສະຫວັນຂອງພຣະຢາເວ ຈຶ່ງປະກົດຕໍ່ນາງ ແລະເວົ້າກັບນາງວ່າ, “ດຽວນີ້, ເຈົ້າບໍ່ສາມາດຖືພາໄດ້, ແລະເຈົ້າບໍ່ມີລູກ, ແຕ່ວ່າດຽວ-
ນີ້ເຈົ້າຈະຖືພາ, ແລະເຈົ້າຈະໄດ້ລູກຜູ້ຊາຍ. 4ຈົ່ງລະວັງຢ່າດື່ມເຫລົ້າອະງຸ່ນ ຫລື ຂອງມຶນເມົາ ແລະຢ່າກິນອາຫານທີ່ບໍ່ສະອາດ. 5ເບິ່ງແມ, ເຈົ້າຈະ
ຖືພາ ແລະຈະໄດ້ລູກຜູ້ຊາຍຄົນຫນຶ່ງ. ຢ່າໃຫ້ມີດແຖ ຕັດຜົມຂອງລາວ, ເພາະເດັກຄົນນີ້ຈະເປັນນາຊີຣີແດ່ພຣະເຈົ້າຕັ້ງແຕ່ຢູ່ໃນທ້ອງ ແລະລາວ
ຈະເປັນຜູ້ຊ່ວຍຄົນອິສະຣາເອນໃຫ້ພົ້ນຈາກມືຂອງພວກຟີລິດສະຕິນ.”
6ຈາກນັ້ນ ຍິງຄົນນັ້ນກໍອອກມາ ແລະບອກຜົວຂອງນາງວ່າ, “ຄົນຂອງພຣະເຈົ້າໄດ້ມາຫາຂ້ອຍ, ແລະລັກສະນະຂອງເພິ່ນເປັນເຫມືອນທູດ
ສະຫວັນຂອງພຣະເຈົ້າ, ເປັນຕາຢ້ານຫລາຍ. ຂ້ອຍເອງກໍບໍ່ໄດ້ຖາມເພິ່ນເລີຍວ່າ ເພິ່ນມາຈາກໃສ, ແລະເພິ່ນບໍ່ໄດ້ບອກຊື່ຂອງເພິ່ນໃຫ້ຂ້ອຍຮູ້.
7ແຕ່ເພິ່ນໄດ້ບອກຂ້ອຍວ່າ, ເບິ່ງແມ! ເຈົ້າຈະຕ້ອງຖືພາ ແລະເຈົ້າຈະໄດ້ລູກຊາຍຄົນຫນຶ່ງ. ດັ່ງນັ້ນ ຈົ່ງຢ່າດື່ມເຫລົ້າອະງຸ່ນ ຫລືຂອງມຶນເມົາ
ແລະຢ່າກິນອາຫານທີ່ຫວງຫ້າມ, ເພາະເດັກນ້ອຍນັ້ນຈະເປັນຄົນນາຊີຣີແດ່ພຣະເຈົ້າຕັ້ງແຕ່ລາວຢູ່ໃນທ້ອງຂອງເຈົ້າຈົນເຖິງວັນຕາຍຂອງລາວ.”
8ຫລັງຈາກນັ້ນ ມາໂນອາກໍອ້ອນວອນຕໍ່ພຣະຢາເວວ່າ, “ຂ້າແດ່ພຣະຢາເວ, ຂໍຊົງໂຜດສົ່ງຜູ້ຊາຍທີ່ພຣະອົງສົ່ງມານັ້ນມາຫາພວກຂ້ານ້ອຍ
ອີກຄັ້ງເຖີດ ເພື່ອພຣະອົງຊົງຈະສັ່ງສອນພວກຂ້ານ້ອຍເຖິງສິ່ງທີ່ພວກຂ້ານ້ອຍຈະເຮັດກັບເດັກທີ່ຈະເກີດມານັ້ນ.” 9ສ່ວນພຣະເຈົ້າກໍ
ຊົງຕອບຄຳອະທິຖານຂອງມາໂນອາ ແລະທູດສະຫວັນຂອງພຣະອົງໄດ້ກັບຄືນມາຫາຍິງນັ້ນອີກຄັ້ງ ໃນຂະນະທີ່ນາງກຳລັງນັ່ງຢູ່ໃນທົ່ງນາ ແຕ່ມາ-
ໂນອາ, ຜູ້ເປັນຜົວຂອງນາງບໍ່ໄດ້ຢູ່ນຳນາງ.
10ດັ່ງນັ້ນ ນາງຈຶ່ງແລ່ນໄປບອກຜົວຢ່າງໄວວາວ່າ, “ເບິ່ງແມ! ຊາຍຄົນນັ້ນໄດ້ມາຫາຂ້ອຍ, ຜູ້ທີ່ມາຫາຂ້ອຍມື້ກ່ອນນັ້ນ ໄດ້ປະກົດຕໍ່ຂ້ອຍອີກ
ແລ້ວ.” 11ມາໂນອາຈຶ່ງລຸກຂຶ້ນ ແລະຕາມເມຍຂອງລາວໄປ. ເມື່ອລາວມາຮອດຊາຍຄົນນັ້ນ, ແລະລາວຖາມວ່າ, “ທ່ານນີ້ບໍ ທີ່ເປັນຜູ້ຊາຍເວົ້າກັບ
ເມຍຂອງຂ້ານ້ອຍ?” ຊາຍຄົນນັ້ນກໍຕອບວ່າ, “ແມ່ນແລ້ວ.”
12ດັ່ງນັ້ນ ມາໂນອາຈຶ່ງເວົ້າວ່າ, “ບັດນີ້ ຂໍໃຫ້ຖ້ອຍຄຳຂອງທ່ານເປັນຄວາມຈິງເຖີດ. ຈະມີຂໍ້ປະຕິບັດໃດສຳລັບເດັກຄົນນີ້ແລະຈະເຮັດຫຍັງແດ່?”.
13ທູດສະຫວັນຂອງພຣະຢາເວໄດ້ຕອບມາໂນອາວ່າ, “ເມຍຂອງເຈົ້າຕ້ອງເຮັດທຸກຢ່າງຕາມທີ່ເຮົາໄດ້ບອກລາວນັ້ນຢ່າງລະມັດລະວັງ.” 14ນາງຈະ
ກິນສິ່ງທີ່ມາຈາກຕົ້ນອະງຸ່ນບໍ່ໄດ້, ແລະບໍ່ໃຫ້ນາງດື່ມເຫລົ້ານ້ຳອະງຸ່ນ ຫລືສິ່ງມຶນເມົາ ແລະຢ່າກິນອາຫານທີ່ຫວງຫ້າມ. ນາງຈະຕ້ອງເຊື່ອຟັງທຸກ
ສິ່ງຢ່າງທີ່ເຮົາໄດ້ບອກນາງເຮັດ”.
15ມາໂນອາເວົ້າວ່າກັບທູດສະຫວັນຂອງພຣະຢາເວ,“ຂໍທ່ານຊົງໂຜດຢູ່ນີ້ກ່ອນເຖີດ, ເພື່ອໃຫ້ເວລາແກ່ພວກຂ້ານ້ອຍກະກຽມເອົາແບ້ນ້ອຍຕົວຫນຶ່ງ
ໃຫ້ແກ່ທ່ານ” 16ແຕ່ທູດສະຫວັນຂອງພຣະຢາເວໄດ້ກ່າວຕໍ່ມາໂນອາວ່າ, “ຖ້າວ່າເຮົາຢູ່ນີ້ ເຮົາກໍຈະບໍ່ກິນອາຫານຂອງພວກເຈົ້າ. ແຕ່ຖ້າເຈົ້າຢາກ
ຈັດແຈງເຄື່ອງເຜົາບູຊາ ກໍຈົ່ງຖວາຍແດ່ພຣະຢາເວເຖີດ.”(ມາໂນອາບໍ່ຮູ້ວ່າທ່ານເປັນທູດສະຫວັນຂອງພຣະຢາເວ.)
17ມາໂນອາຈຶ່ງໄດ້ຖາມທູດສະຫວັນຂອງພຣະຢາເວວ່າ, “ທ່ານຊື່ຫຍັງ, ເພື່ອພວກຂ້ານ້ອຍຈະໄດ້ໃຫ້ກຽດຕິຍົດແກ່ທ່ານ ເມື່ອຖ້ອຍຄຳຂອງທ່ານທີ່
ບອກນີ້ກາຍເປັນຈິງ?”. 18ທູດສະຫວັນຂອງພຣະຢາເວໄດ້ຖາມລາວວ່າ, “ເຈົ້າຖາມຊື່ເຮົາເຮັດຫຍັງ? ຊື່ຂອງເຮົາເປັນເລື່ອງອັດສະຈັນ!”.
19ແລ້ວມາໂນອາໄດ້ເອົາແບ້ຫນຸ່ມກັບເມັດເຂົ້າໃສ່ແທ່ນບູຊາຫີນ ແລະ ຖວາຍເຄື່ອງບູຊາເຫລົ່ານັ້ນແດ່ພຣະຢາເວ. ທູດສະຫວັນຂອງພຣະອົງໄດ້
ຊົງເຮັດສິ່ງອັດສະຈັນ. ໃນຂະນະທີ່ມາໂນອາ ກັບເມຍຂອງລາວກຳລັງເຝົ້າເບິ່ງຢູ່. 20ເມື່ອແປວໄຟກຳລັງລຸກຂຶ້ນຈາກແທ່ນບູຊາຂຶ້ນໄປສູ່ທ້ອງຟ້າ
ແລະ ທູດສະຫວັນຂອງພຣະຢາເວ ກໍໄດ້ຂຶ້ນໄປໃນແປວໄຟຂອງແທນບູຊານັ້ນ. ມາໂນອາ ແລະເມຍຂອງລາວ ກໍເຫັນເຫດການນັ້ນ
ແລະກົ້ມຫນ້າລົງເຖິງພື້ນດິນ.
21ທູດສະຫວັນຂອງພຣະຢາເວ ບໍ່ໄດ້ປະກົດອີກເລີຍຕໍ່ມາໂນອາ ແລະເມຍຂອງລາວ. ຫລັງຈາກນັ້ນ ມາໂນອາ
ຈຶ່ງຮູ້ວ່າທ່ານຄືທູດສະຫວັນຂອງພຣະຢາເວ. 22ແລ້ວມາໂນອາໄດ້ເວົ້າຕໍ່ເມຍຂອງຕົນວ່າ, “ພວກເຮົາຈະຕ້ອງຕາຍ, ເພາະພວກເຮົາໄດ້ເຫັນ
ພຣະເຈົ້າ!”.
23ແຕ່ເມຍຂອງລາວຕອບວ່າ, “ຖ້າພຣະຢາເວຊົງຕ້ອງການຂ້າພວກເຮົາ, ພຣະອົງຄົງບໍ່ຍອມຮັບເອົາເຄື່ອງເຜົາບູຊາ ແລະເຄື່ອງບູຊາເຫລົ່ານັ້ນ
ທີ່ພວກເຮົາຖວາຍແດ່ພຣະອົງ. ພຣະອົງຄົງຈະບໍ່ສຳແດງໃຫ້ພວກເຮົາເຫັນສິ່ງທັງຫລາຍເຫລົ່ານີ້, ຫລື
ພຣະອົງກໍບໍ່ຊົງໃຫ້ພວກເຮົາໄດ້ຍິນສິ່ງເຫລົ່ານີ້ໃນເວລານີ້ດອກ.”
24ຕໍ່ມາ ຍິງຜູ້ນີ້ກໍໄດ້ເກີດລູກຊາຍ, ແລະໃສ່ຊື່ວ່າ ແຊມຊັນ. ເດັກນີ້ກໍຈະເລີນເຕີບໂຕຂຶ້ນ ແລະພຣະຢາເວ ກໍຊົງອວຍພອນແກ່ລາວ. 25ພຣະວິນ-
ຍານບໍຣິສຸດຂອງພຣະຢາເວໄດ້ຊົງເຮັດໃຫ້ລາວມີຈິດໃຈກະວົນກະວາຍ ໃນຂະນະທີ່ລາວຢູ່ໃນຄ້າຍພັກຊາວດານ ລະຫວ່າງເມືອງໂຊຣາກັບ
ເມືອງເອຊະຕາໂອນ.

14 [1]ແຊມຊັນໄດ້ລົງໄປໃນເມືອງຕິມນາ, ແລະໃນເມືອງນີ້ລາວໄດ້ເຫັນຜູ້ຍິງຄົນຫນຶ່ງ, ຫນຶ່ງໃນບັນດາລູກສາວຊາວຟີລິດສະຕິນ.[2]ເມື່ອລາວກັບ
ຄືນມາບ້ານ ແລະລາວເວົ້າສູ່ພໍ່ແມ່ຂອງລາວຟັງວ່າ, "ລູກໄດ້ເຫັນຍິງສາວຄົນຫນຶ່ງໃນບັນດາລູກສາວຂອງຄົນຟີລິດສະຕິນ ຢູ່ໃນເມືອງຕິມ-
ນາ. ບັດນີ້ ຂໍນາງໃຫ້ເປັນເມຍຂອງລູກເຖີ້ນ."

[3]ແຕ່ພໍ່ແມ່ຂອງລາວໄດ້ຕອບວ່າ, "ບໍ່ມີຜູ້ຍິງຈັກຄົນຫນຶ່ງໃນບັນດາຜູ້ສາວໃນເຊື້ອສາຍຂອງເຈົ້າເອງ, ຫລືຄົນໃນປະຊາຊົນຂອງພວກເຮົາບໍ? ເຈົ້າ
ຈຶ່ງຢາກໄປເອົາເມຍຊາວຟີລິດສະຕິນ ຊຶ່ງເປັນພວກທີ່ບໍ່ໄດ້ຮັບພິທີຕັດ ມາເປັນເມຍຂອງເຈົ້າ" ແຕ່ແຊມຊັນບອກພໍ່ຂອງລາວວ່າ,
"ຂໍນາງໃຫ້ລູກເຖີ້ນ, ເພາະເມື່ອລູກເຫັນນາງ, ລູກພໍໃຈນຳນາງຜູ້ດຽວເທົ່ານັ້ນ."[4]ແຕ່ພໍ່ແມ່ຂອງລາວກໍບໍ່ໄດ້ຮູ້ຄືກັນວ່າ ເລື່ອງນີ້ມາຈາກພຣະເຢວາ,
ຊຶ່ງນຳພາແຊມຊັນເຮັດດັ່ງນີ້ ເພາະພຣະອົງຊົງຕ້ອງການສ້າງຂໍ້ຂັດແຍ້ງກັບຄົນຟີລິດສະຕິນ (ໃນເວລານີ້ຄົນອິສະຣາເອນກໍຢູ່ໃຕ້ກຳລັງປົກຄອງ
ຂອງພວກຟີລິດສະຕິນ).
[5]ຕໍ່ມາ ແຊມຊັນໄດ້ລົງໄປຍັງເມືອງຕິມນາພ້ອມກັບພໍ່ແມ່ຂອງລາວ, ແລະ ພວກເຂົາໄປຮອດສວນອະງຸ່ນຂອງເມືອງຕິມນາ. ແລະ ເບິ່ງແມ, ມີສິງ
ຫນຸ່ມໂຕຫນຶ່ງອອກມາ ແລະຮ້ອງ ກຳຣາມເຂົ້າໃສ່ແຊມຊັນ.[6]ພຣະວິນຍານບໍຣິສຸດຂອງພຣະຜູ້ເປັນເຈົ້າຊົງສະຖິດກັບລາວ, ແລະ ລາວ
ໄດ້ໃຊ້ມືຈີກໂຕສິງນັ້ນຢ່າງງ່າຍດາຍເຫມືອນດັ່ງຈີກແບ້ໂຕນ້ອຍໆ, ແລະ ທັງທີ່ລາວບໍ່ມີຫຍັງໃນມືຂອງລາວເລີຍ. ແຕ່ລາວບໍ່ໄດ້ບອກໃຫ້ພໍ່ແມ່
ຂອງລາວຮູ້ເຖິງສິ່ງທີ່ລາວໄດ້ເຮັດໄປນັ້ນ.
[7]ລາວໄດ້ໄປ ແລະລົມສາວຜູ້ນັ້ນ, ແລະເມື່ອລາວແນມເບິ່ງນາງ, ລາວກໍພໍໃຈໃນນາງຫລາຍ.[8]ບໍ່ພໍເທົ່າໃດມື້ຕໍ່ມາ ເມື່ອ ແຊມຊັນກໍກັບມາແຕ່ງງານ
ກັບນາງ, ລາວໄດ້ແວ່ອອກຈາກທາງໄປເບິ່ງຊາກສິງນັ້ນ. ແລະ, ເບິ່ງແມ, ມີຝູງເຜິ້ງມາເຮັດຮັງ ແລະມີນ້ຳເຜິ້ງໃນຊາກສິງໂຕຕົວນັ້ນ.[9]ລາວຈຶ່ງບີບ
ເອົານ້ຳເຜິ້ງໃສ່ມືຂອງລາວ ແລະເດີນທາງຕໍ່ໄປ, ກິນໄປຕາມທາງ. ເມື່ອໄປຮອດພໍ່ແມ່ຂອງລາວ, ລາວໄດ້ແບ່ງນ້ຳເຜິ້ງນັ້ນໃຫ້ແກ່ພວກເພິ່ນ ແລະ
ພວກເພິ່ນກໍກິນ. ແຕ່ລາວບໍ່ໄດ້ບອກພວກເພິ່ນເລີຍວ່າ ລາວໄດ້ເອົານ້ຳເຜິ້ງນັ້ນມາຈາກຊາກໂຕສິງ.
[10]ແລ້ວພໍ່ຂອງແຊມຊັນໄດ້ໄປບ້ານຂອງຍິງສາວນັ້ນ ແລະແຊມຊັນກໍຈັດງານກິນລ້ຽງຂຶ້ນໃນທີ່ນັ້ນ, ຕາມທຳນຽມຂອງພວກຊາຍຫນຸ່ມ.
[11]ທັນທີບັນດາຍາດຂອງນາງເຫັນລາວ, ພວກເຂົາກໍພາລາວໄປຢູ່ກັບພວກເພື່ອນຂອງພວກເຂົາສາມສິບຄົນ.
[12]ແຊມຊັນໄດ້ກ່າວກັບພວກເຂົາວ່າ, "ຂໍໃຫ້ພວກເຈົ້າທວາຍຈັກຂໍ້ຫນຶ່ງ. ຖ້າຄົນໃດຄົນຫນຶ່ງໃນພວກເຈົ້າບອກຄຳຕອບແກ່ຂ້ອຍໄດ້ໃນລະຫວ່າງ
ງານລ້ຽງເຈັດມື້, ຂ້ອຍຈະມອບເສື້ອຄຸມຜ້າປ່ານສາມສິບຕົວ ແລະເສື້ອຜ້າສາມສິບຊຸດ.[13]ແຕ່ຖ້າພວກເຈົ້າບອກຄຳຕອບແກ່ຂ້ອຍບໍ່ໄດ້, ຂໍໃຫ້ພວກ
ເຈົ້າຕ້ອງມອບເສື້ອຄຸມຜ້າປ່ານສາມສິບຕົວ ແລະ ເສື້ອຜ້າສາມສິບຊຸດໃຫ້ແກ່ຂ້ອຍເດີ". ພວກເຂົາຈຶ່ງເວົ້າຕໍ່ແຊມຊັນວ່າ, "ຈົ່ງບອກຄຳທວາຍນັ້ນ
ມາ."
[14]ແຊມຊັນຈຶ່ງເວົ້າວ່າ, "ມີຂອງທີ່ກິນໄດ້ອອກມາຈາກຕົວຜູ້ກິນ; ມີຂອງຣົດຫວານອອກມາຈາກຕົວຜູ້ແຂງແຮງ".
ແຕ່ບັນດາແຂກຂອງພວກເຂົາບໍ່ສາມາດຫາຄຳຕອບໄດ້ໃນ ສາມມື້ຕໍ່ມາ.
[15]ໃນມື້ທີສີ່ ພວກເຂົາໄດ້ເວົ້າຕໍ່ເມຍຂອງແຊມຊັນວ່າ, "ຈົ່ງວາງກົນອຸບາຍໃຫ້ຜົວຂອງເຈົ້າ ເພື່ອໃຫ້ເຂົາບອກຄຳຕອບຂອງຄຳທວາຍນັ້ນແກ່ພວກ-
ຂ້ອຍແດ່, ຫລື ຖ້າບໍ່ດັ່ງນັ້ນ ພວກເຮົາຈະເຜົາເຈົ້າ ແລະເຮືອນຂອງພໍ່ຂອງເຈົ້າ. ເຈົ້າໄດ້ເຊີນພວກເຮົາມາທີ່ນີ້ ເພື່ອຈະເຮັດໃຫ້ພວກເຮົາຍາກຈົນ
ບໍ?"
[16]ເມຍຂອງແຊມຊັນຈຶ່ງໄດ້ທັງຮ້ອງໄຫ້ ຕໍ່ຫນ້າເຂົາ; ແລະເວົ້າວ່າ, " ສິ່ງທີ່ເຈົ້າເຮັດທັງຫມົດນັ້ນເປັນການກຽດຊັງຂອັຍ! ເຈົ້າບໍ່ໄດ້ຮັກຂ້ອຍ. ເຈົ້າ
ຕັ້ງຄຳທວາຍໃຫ້ຫມູ່ຂອງຂ້ອຍ, ແລະ ບໍ່ໄດ້ບອກຄຳຕອບນັ້ນແກ່ຂ້ອຍ" ແຊມຊັນໄດ້ເວົ້າຕໍ່ນາງວ່າ, "ແມ່ນແຕ່ພໍ່ແມ່ຂອງຂ້ອຍກໍຍັງບໍ່ໄດ້ບອກ
ເພິ່ນ, ເຫດໃດຂ້ອຍຈຶ່ງຈະບອກເຈົ້າ."[17]ນາງໄດ້ຮ້ອງໄຫ້ຕະຫລອດເຈັດມື້ທີ່ງານກິນລ້ຽງນັ້ນຂອງພວກເຂົາ. ພໍມາຮອດມື້ທີເຈັດ ແຊມຊັນກໍບອກ
ຄຳຕອບແກ່ນາງ ເພາະວ່ານາງເປັນຄົນຊູຊີຫລາຍ. ແລ້ວນາງກໍນຳເອົາຄຳຕອບນັ້ນໄປບອກຫມູ່ຂອງຕົນ.
[18]ກ່ອນຈະເຖິງຕາເວັນຕົກ ໃນມື້ທີເຈັດ ພວກຜູ້ຊາຍຊາວເມືອງນັ້ນຈຶ່ງເວົ້າຕໍ່ລາວວ່າ, "ບໍ່ມີສິ່ງໃດຈະຫວານກວ່ານ້ຳເຜິ້ງ? ແລະບໍ່ມີສິ່ງໃດຈະແຮງ
ກວ່າໂຕສິງ?" ແຊມຊັນຈຶ່ງຕອບພວກເຂົາວ່າ, "ຖ້າວ່າພວກເຈົ້າບໍ່ເອົາງົວແມ່ຂອງຂ້ອຍໄປໄຖນາ, ພວກເຈົ້າ
ກໍຄົງຈະຊອກຫາຄຳຕອບຂອງຄຳທວາຍຂອງຂອັຍບໍ່ໄດ້."
[19]ທັນໃດນັ້ນພຣະວິນຍານບໍຣິສຸດຂອງພຣະຢາເວໄດ້ຊົງສະຖິດກັບແຊມຊັນດ້ວຍພະລັງ. ແຊມຊັນໄດ້ລົງໄປໃນເມືອງອາສະເກໂລນ ແລະຂ້າຊາຍ
ສາມສິບຄົນຢູ່ທີ່ເມືອງນັ້ນ. ລາວໄດ້ຍຶດເອົາເສື້ອຜ້າອັນຈົບງາມຂອງພວກເຂົາ, ແລະລາວໄດ້ໃຫ້ເສື້ອຜ້ານັ້ນໃຫ້ແກ່ຜູ້ທີ່ຕອບຄຳທວາຍນັ້ນໄດ້.
ແລ້ວແຊມຊັນກໍກັບຄືນເມືອເຮືອນພໍ່ຂອງລາວດ້ວຍຄວາມໃຈຮ້າຍ.[20]ສ່ວນເມຍຂອງລາວ ກໍໄດ້ຖືກຍົກໃຫ້ກັບຫມູ່ຂອງລາວ.


generated on Tue Jun 17 19:01:42 2025

15 [1]ຫລາຍມື້ຕໍ່ມາ, ໃນຊ່ວງເກັບກ່ຽວເຂົ້າສາລີ, ແຊມຊັນໄດ້ເອົາແບ້ນ້ອຍໂຕຫນຶ່ງ ແລະ ອອກໄປຢາມເມຍຂອງລາວ. ແຊມຊັນໄດ້ເວົ້າ
ຕໍ່ຕົນເອງວ່າ, “ຂ້ອຍຊິໄປຫ້ອງເມຍຂອງຂ້ອຍ”. ແຕ່ພໍ່ຂອງນາງບໍ່ອະນຸຍາດໃຫ້ລາວເຂົ້າໄປໃນ.[2]ພໍ່ຂອງນາງໄດ້ເວົ້າວ່າ, “ຂ້ອຍຄິດວ່າເຈົ້າ
ຊັງນາງແລ້ວ, ສະນັ້ນຂ້ອຍຈຶ່ງຍົກລາວໃຫ້ແກ່ຫມູ່ເພື່ອນຂອງເຈົ້າ. ນ້ອງສາວຂອງນາງກໍສວຍງາມກວ່ານາງ, ແມ່ນບໍ? ເອົານາງໄປແທນສາ”.

[3]ແຊມຊັນໄດ້ເວົ້າພວກເຂົາວ່າ, “ໃນເທື່ອນີ້ ຂ້ອຍຈະບໍ່ມີຄວາມຜິດໃນເລື່ອງກ່ຽວກັບພວກຟີລິດສະຕິນ
ເມື່ອຂ້ອຍເຮັດໃຫ້ພວກເຂົາເຈັບປວດ.”[4]ແຊມຊັນຈຶ່ງໄປ ແລະຈັບເອົາຫມາຈອກສາມຮ້ອຍໂຕ ແລະລາວໄດ້ມັດຫາງຂອງມັນແຕ່ລະຄູ່ຕິດກັນໄວ້.
ແລ້ວລາວໄດ້ເອົາໂຄມໄຟມາ ແລະມັດໄວ້ທາງກາງຫາງຂອງແຕ່ລະຄູ່.
[5]ແລ້ວລາວໄດ້ໃຕ້ໂຄມໄຟນັ້ນ, ແລະລາວກໍປ່ອຍຝູງຫມາຈອກນັ້ນເຂົ້າໄປໃນນາເຂົ້າຂອງພວກຟີລິດສະຕິນ, ແລະພວກມັນ
ກໍຈຸດໄຟເຜົາເຂົ້າທັງກອງທີ່ຊ້ອນກັນ ແລະເມັດພືດທີ່ຢືນຕົ້ນຢູ່ທົ່ງນາ ພ້ອມດ້ວຍສວນອະງຸ່ນ ແລະສວນຫມາກກອກ.[6]ພວກຟີລິດສະຕິນຈຶ່ງຖາມ
ວ່າ, “ແມ່ນໃຜເປັນຜູ້ເຮັດນີ້?” ແລ້ວພວກເຂົາກໍບອກວ່າ,"ແມ່ນແຊມຊັນເປັນຜູ້ເຮັດ, ເພາະພໍ່ເຖົ້າຂອງລາວທີ່ເມືອງຕິມນາ, ໄດ້ຍົກເມຍຂອງ
ແຊມຊັນ ແລະໃຫ້ແກ່ຫມູ່ຂອງລາວ". ຫລັງຈາກນັ້ນຄົນຟີລິດສະຕິນຈຶ່ງໄປ ແລະ ເຜົາຍິງຄົນນີ້ ແລະພໍ່ຂອງລາວ.
[7]ແຊມຊັນໄດ້ເວົ້າຕໍ່ພວກເຂົາວ່າ, “ ຖ້າພວກເຈົ້າເຮັດແບບນີ້, ຂ້ອຍຈະແກ້ແຄ້ນຕໍ່ພວກເຈົ້າ, ແລະຫລັງຈາກການແກ້ແຄ້ນສຳເລັດ
ຂ້ອຍຈະຢຸດ.”[8]ຫລັງຈາກນັ້ນລາວກໍຟັນພວກເຂົາເປັນຕ່ອນໆ, ສະໂພກ ແລະກົກຂາ, ດ້ວຍການຂ້າຢ່າງໂຫດຮ້າຍ. ແລ້ວລາວກໍຫນີໄປ
ແລະອາໄສຢູ່ໃນຖ້ຳທີ່ຫນ້າຜາເອຕາມ.
[9]ແລ້ວ ພວກຟີລິດສະຕິນໄດ້ຂຶ້ນມາ ແລະພວກເຂົາກະກຽມພ້ອມສູ້ຮົບໃນຢູດາ ແລະຕັ້ງກອງທັບຂອງພວກເຂົາໃນເມືອງເລຮີ.[10]ພວກຜູ້ຊາຍຢູດາ
ຈຶ່ງຖາມພວກເຂົາວ່າ, “ເປັນຫຍັງພວກເຈົ້າຈຶ່ງມາຮົບເສີກກັບພວກເຮົາ?” ພວກເຂົາໄດ້ຕອບວ່າ, “ພວກເຮົາໄດ້ຍົກທັບມາສູ້ຮົບ ເພື່ອຈະມາຈັບ
ແຊມຊັນ, ແລະ ພວກເຮົາຈະເຮັດຕໍ່ລາວຄືລາວໄດ້ເຮັດຕໍ່ພວກເຮົາ.”
[11]ຕໍ່ມາຊາວຢູດາສາມພັນຄົນກໍພາກັນໄປຍັງຖ້ຳທີ່ຫນ້າຜາ ເອຕາມນັ້ນ, ແລະພວກເຂົາໄດ້ເວົ້າກັບແຊມຊັນວ່າ, “ເຈົ້າຮູ້ບໍ່ວ່າພວກຟີລິດສະ-
ຕິນເປັນຜູ້ປົກຄອງເຫນືອພວກເຮົາ? ເປັນຫຍັງເຈົ້າຈຶ່ງເຮັດແບບນີ້ຕໍ່ພວກເຮົາ?” ແຊມຊັນກໍຕອບພວກເຂົາວ່າ, “ພວກເຂົາໄດ້ເຮັດຕໍ່ຂ້ອຍກ່ອນ,
ແລະດ້ວຍເຫດນັ້ນຂ້ອຍເຮັດຕໍ່ພວກຟີລິດສະຕິນ ເຊັ່ນກັນ”
[12]ພວກເຂົາຈຶ່ງຕອບແຊມຊັນວ່າ. “ພວກເຮົາລົງມານີ້ ເພື່ອຈັບເອົາເຈົ້າ ແລະມອບໃຫ້ພວກຟີລິດສະຕິນ”. ແຊມຊັນກໍເວົ້າຕໍ່ພວກເຂົາວ່າ, “ສາ-
ບານກັບຂ້ອຍກ່ອນວ່າ ພວກເຈົ້າຈະບໍ່ຂ້າຂ້ອຍ. ດ້ວຍຕົວຂອງພວກເຈົ້າເອງ”[13]ພວກເຂົາໄດ້ຕອບວ່າ, “ບໍ່, ພວກ-
ເຮົາຈະມັດເຈົ້າດ້ວຍເຊືອກເທົ່ານັ້ນ ແລະ ມອບເຈົ້າໃຫ້ພວກເຂົາ. ພວກເຮົາສາບານ ພວກເຮົາຈະບໍ່ຂ້າເຈົ້າ” ແລ້ວພວກເຂົາກໍມັດແຊມຊັນດ້ວຍ
ເຊືອກໃຫມ່ສອງເສັ້ນ ແລະພາລາວໄປຈາກຫນ້າຜານັ້ນ.
[14]ເມື່ອມາຮອດເມືອງເລຮີ, ພວກຟີລິດສະຕິນກໍແລ່ນມາພ້ອມທັງຮ້ອງດັງ ເມື່ອພວກເຂົາເຫັນລາວ. ແຕ່ພຣະວິນຍານບໍລິສຸດຂອງພຣະຢາເວໄດ້
ຊົງສະຖິດໃຫ້ລາວມີກຳລັງ. ເຊືອກທີ່ມັດແຂນຂອງລາວ ກໍກາຍເປັນເຫມືອນຜ້າປ່ານທີ່ຖືກໄຟໄຫມ້ ແລະ ເຊືອກເຫລົ່ານັ້ນກໍຫລຸດອອກຈາກມື
ຂອງລາວ.
[15]ແຊມຊັນໄດ້ເຫັນກະດູກຄາງລໍທີ່ຍັງໃຫມ່ຢູ່, ແລະລາວຈຶ່ງເດ່ມືລົງຈັບເອົາ ແລະໄດ້ໃຊ້ກະດູກຄາງລໍນັ້ນຂ້າພວກຟີລິດສະຕິນຕາຍໄປພັນຄົນ.
[16]ແຊມຊັນໄດ້ກ່າວວ່າ, “ດ້ວຍກະດູກຄາງລໍອັນດຽວ, ເປັນກອງຊ້ອນກອງ, ຍ້ອນກະດູກຄາງລໍອັນນີ້ ຂ້ອຍໄດ້ຂ້າຄົນຫນຶ່ງພັນຄົນ.”
[17]ເມື່ອ ແຊມຊັນໄດ້ກ່າວຈົບແລ້ວ, ລາວກໍແກວ່ງກະດູກລໍຖິ້ມ, ແລະລາວໄດ້ເອີ້ນສະຖານທີ່ນັ້ນວ່າ ພູກະດູກຄາງລໍ.[18]ຕໍ່ມາ ແຊມຊັນຫິວນ້ຳຫລາຍ,
ແລະລາວຈຶ່ງຮ້ອງທູນຕໍ່ພຣະຢາເວວ່າ, “ພຣະອົງຊົງມອບໄຊຊະນະອັນຍິ່ງໃຫຍ່ໃຫ້ແກ່ຂ້ານ້ອຍ.ນີ້ຂ້ານ້ອຍຈະຕາຍຢູ່ແລ້ວໂດຍຫິວນ້ຳ ແລະຕົກ
ຢູ່ໃນກຳມືຂອງພວກຄົນທີ່ຍັງບໍ່ທັນໄດ້ຮັບພິທີຕັດບໍ?”
[19]ພຣະຢາເວກໍຊົງບັນດານໃຫ້ເປີດຮູນ້ຳຢູ່ທີ່ເລຮີ ແລະມີນ້ຳອອກມາ. ເມື່ອແຊມຊັນດື່ມນ້ຳແລ້ວ ແລະກຳລັງຂອງລາວກໍກັບມາ
ແລະລາວກໍຟື້ນຕົວຄືນ. ສະນັ້ນລາວຈຶ່ງເອີ້ນສະຖານທີ່ນີ້ວ່າ ເອັນຮັກກໍເຣ, ແລະຊື່ຍັງມີຢູ່ໃນເມືອງເລຮີຈົນເທົ່າທຸກມື້ນີ້.[20]ແຊມຊັນໄດ້ປົກຄອງອິສ
ະຣາເອນໃນສະໄຫມຄົນຟີລິດສະຕິນຢູ່ເປັນເວລາຊາວປີ.

 generated on Tue Jun 17 19:01:42 2025

# 16

1ຕໍ່ມາ ແຊມຊັນໄດ້ໄປທີ່ເມືອງກາຊາ ແລະໄດ້ພົບຍິງໂສເພນີຄົນຫນຶ່ງຢູ່ທີ່ນັ້ນ, ລາວຈຶ່ງເຂົ້າໄປນອນຢູ່ນຳນາງ.2 2 ເມື່ອຄົນກາຊາຮູ້ວ່າ, ແຊມ-
ຊັນໄດ້ມາທີ່ນີ້ແລ້ວ. ພວກເຂົາກໍພາກັນມາອ້ອມສະຖານທີ່ ແລະໃນທີ່ລັບ, ພວກເຂົາລໍຖ້າລາວຢູ່ປະຕູເມືອງຕະຫລອດຄືນ. ພວກເຂົາພາກັນ
ງຽບຢູ່ຕະຫລອດທັງຄືນ. ພວກເຂົາເຄີຍເວົ້າວ່າ, “ຂໍໃຫ້ພວກເຮົາລໍຖ້າຈົນຮອດມື້ອື່ນເຊົ້າ, ແລະຈາກນັ້ນພວກເຂົາຈະຂ້າລາວຖິ້ມ.”

3ແຕ່ແຊມຊັນໄດ້ນອນຢູ່ຕຽງນອນຮອດຕອນທ່ຽງຄືນ. ໃນເວລາທ່ຽງຄືນ ລາວກໍລຸກ ແລະລາວດຶງປະຕູເມືອງພ້ອມທັງເສົາປະຕູທັງສອງຕົ້ນ,
ແລະລາວໄດ້ຖອນເສົາເຫລົ່ານັ້ນຂຶ້ນມາຈາກດິນ, ບານປະຕູແລະຂອບທັງຫມົດ, ແລ້ວວາງໃສ່ບ່າຂອງລາວ, ແລະແບກຂຶ້ນໄປຈົນເຖິງຍອດພູ,
ຕໍ່ຫນ້າເມືອງເຮັບໂຣນ.
4ຫລັງຈາກນັ້ນ ແຊມຊັນກໍມີຄວາມຮັກໄຄ່ກັບຍິງຄົນຫນຶ່ງທີ່ອາໄສຢູ່ຮ່ອມພູໂສເຣັກ.ນາງຊື່ວ່າເດລີລາ. 5ພວກຜູ້ນຳຟີລິດສະຕິນຈຶ່ງໄປຫາຍິງຄົນ
ນັ້ນ, ແລະເວົ້ານາງວ່າ, “ຈົ່ງວາງກົນອຸບາຍເພື່ອຖາມແຊມຊັນວ່າ ກຳລັງທີ່ມະຫາສານຂອງລາວມາຈາກບ່ອນໃດ, ແລະໂດຍວິທີໃດທີ່ພວກເຮົາ
ຈະຊະນະລາວໄດ້, ເພື່ອພວກເຮົາຈັບມັດລາວໄດ້ ເພື່ອເຮັດໃຫ້ລາວອັບອາຍ. ຈົ່ງເຮັດເຊັ່ນນີ້, ພວກເຮົາແຕ່ລະຄົນຈະເອົາເງິນໃຫ້ເຈົ້າ ພັນຫນຶ່ງ
ຮ້ອຍຫລຽນ.”
6ດັ່ງນັ້ນ ນາງເດລີລາຈຶ່ງເວົ້າແຊມຊັນວ່າ, “ຈົ່ງບອກໃຫ້ຂ້ອຍຮູ້ແດ່ວ່າ ເຈົ້າມີກຳລັງມະຫາສານໄດ້ແນວໃດ?, ແລະຄົນໃດຄົນຫນຶ່ງຕ້ອງການມັດ
ເຈົ້າໄດ້ແນວໃດ, ດັ່ງນັ້ນ ເຈົ້າອາດຈະຖືກຄວບຄຸມ.”7ແຊມຊັນກໍຕອບນາງວ່າ, “ຖ້າວ່າພວກເຂົາມັດຂ້ອຍດ້ວຍເຊືອກຫນັງທະນູໃຫມ່ໆ ເຈັດເສັ້ນ
ທີ່ຍັງບໍ່ທັນແຫ້ງ, ຂ້ອຍຈະກາຍເປັນຄົນອ່ອນແອ ແລະ ເຫມືອນຄົນອື່ນໆ.”
8ແລ້ວພວກຜູ້ປົກຄອງຟີລິດສະຕິນກໍນຳເອົາເຊືອກຫນັງທະນູທີ່ຍັງໃຫມ່ ແລະຍັງບໍ່ທັນແຫ້ງເຈັດເສັ້ນມາໃຫ້ເດລີລາ, ແລະ ນາງກໍມັດແຊມຊັນໄວ້.
9ຂະນະທີ່ນາງໄດ້ໃຫ້ພວກຜູ້ຊາຍເຫລົ່ານັ້ນລໍຖ້າຢູ່ໃນຫ້ອງຂ້າງໃນຂອງນາງ. ນາງໄດ້ເວົ້າກັບລາວວ່າ, “ແຊມຊັນ, ພວກຟີລິດສະຕິນ
ມາຫາເຈົ້າແລ້ວ!”. ແຕ່ແຊມຊັນໄດ້ດຶງເຊືອກນັ້ນຂາດເຫມືອນດັ່ງໄຟໄຫມ້ເສັ້ນດ້າຍ. ດ້ວຍເຫດນີ້ຄວາມເລິກລັບກ່ຽວກັບກຳລັງຂອງລາວ
ຈຶ່ງບໍ່ໄດ້ຖືກເປີດເຜີຍ.
10ຕໍ່ມາ ນາງເດລີລາໄດ້ເວົ້າຕໍ່ແຊມຊັນອີກວ່າ, “ ນີ້ເປັນສິ່ງທີ່ເຈົ້າໄດ້ລໍ້ລວງຂ້ອຍ ແລະເວົ້າຕົວະຂ້ອຍ. ສະນັ້ນ ຂໍໃຫ້ເຈົ້າບອກຂ້ອຍແດ່ວ່າ
ເຈົ້າມີກຳລັງມະຫາສານໄດ້ແນວໃດ?”11ລາວໄດ້ຕອບນາງວ່າ, “ຖ້າພວກເຂົາມັດຂ້ອຍດ້ວຍເຊືອກໃຫມ່ທີ່ຍັງບໍ່ທັນເຄີຍໃຊ້, ຂ້ອຍຈະເປັນຄົນອ່ອນ-
ແອ ແລະເປັນເຫມືອນຄົນອື່ນໆ.”12ດັ່ງນັ້ນ ນາງເດລີລາຈຶ່ງເອົາເຊືອກໃຫມ່ນັ້ນມາມັດລາວ ແລະເວົ້າກັບລາວວ່າ, “ແຊມຊັນ ພວກຟີລິດສະຕິນ
ມາຫາເຈົ້າແລ້ວ!”. ຄົນເຫລົ່ານັ້ນກຳລັງລໍຖ້າຢູ່ໃນຫ້ອງຂ້າງໃນ. ແຕ່ແຊມຊັນກໍດຶງເຊືອກນັ້ນໃຫ້ຂາດ
ອອກຈາກແຂນຂອງລາວເປັນເຫມືອນເສັ້ນດ້າຍ.
13ແລ້ວນາງເດລີລາໄດ້ຖາມແຊມຊັນວ່າ, “ຈົນເຖິງດຽວນີ້ ເຈົ້າຍັງລໍ້ລວງຂ້ອຍ ແລະເວົ້າຕົວະຂ້ອຍອີກ. ຂໍເຈົ້າຈົ່ງບອກຂ້ອຍວ່າ
ເຈົ້າມີກຳລັງມະຫາສານໄດ້ແນວໃດ?”. ແຊມຊັນຈຶ່ງບອກວ່າ, “ຖ້າເຈົ້າເອົາຜົມເຈັດປອຍຂອງຂ້ອຍໄປຕຳໃນຫູກແລະຖືກຟືມໃຫ້ແຫນ້ນ, ແລ້ວ
ຂ້ອຍຈະກາຍເປັນຄົນອ່ອນແອເຫມືອນຄົນອື່ນ.”14ໃນະຂະນະທີ່ລາວນອນ, ນາງເດລີລາ ແລ້ວກໍເອົາຜົມເຈັດປອຍຂອງລາວ ໄປຕຳໃນຫູກ, ແລະ
ຖືກຟືມໃຫ້ແຫນ້ນ, ແລະນາງກໍເວົ້າກັບລາວວ່າ, “ແຊມຊັນ! ພວກຟີລິດສະຕິນມາຫາເຈົ້າແລ້ວ”. ລາວຈຶ່ງຕື່ນຂຶ້ນຈາກຫລັບ ແລະຖອດຟືມ ແລະ
ດຶງເຄືອອອກຈາກຫູກນັ້ນ.
15ນາງໄດ້ເວົ້າກັບລາວວ່າ, “ເຈົ້າຈະເວົ້າແນວໃດ, 'ເຈົ້າຮັກຂ້ອຍ', ໃນເມື່ອເຈົ້າມີຄວາມລັບຂອງເຈົ້າກັບຂ້ອຍ? ເຈົ້າໄດ້ລໍ້ລວງຂ້ອຍເຖິງສາມເທື່ອ
ແລ້ວ ແລະເຈົ້າຍັງບໍ່ທັນບອກຂ້ອຍເລີຍວ່າ ເຈົ້າມີກຳລັງມະຫາສານໄດ້ແນວໃດ?”.16ທຸກມື້ ນາງເດລີລາໄດ້ກົດດັນລາວດ້ວຍຄຳເວົ້າຂອງນາງ,
ແລະນາງໄດ້ບັງຄັບລາວຫລາຍຢ່າງ ຈົນວ່າແຊມຊັນຢາກຈະຕາຍເສຍ.
17ໃນສຸດທ້າຍແຊມຊັນໄດ້ບອກນາງທຸກຢ່າງຕາມຄວາມຈິງວ່າ, “ຂ້ອຍບໍ່ເຄີຍໃຊ້ມີດຕັດຜົມເທິງຫົວຂອງຂ້ອຍຈັກເທື່ອເລີຍ, ເພາະວ່າເປັນຄົນນາ-
ຊີຣີແດ່ພຣະເຈົ້າ ຕັ້ງແຕ່ຢູ່ໃນທ້ອງແມ່ຂອງຂ້ອຍ, ຖ້າຫົວຂອງຂອ້ຍຖືກຕັດຜົມ, ແລ້ວກຳລັງຂອງຂ້ອຍຈະຫມົດ, ແລະ ຂ້ອຍຈະກາຍ-
ເປັນຄົນອ່ອນແອເຫມືອນຄົນອື່ນໆ.
18ເມື່ອນາງເດລີລາເຊື່ອໃຈວ່າລາວໄດ້ບອກຄວາມຈິງກັບນາງແລ້ວ, ນາງກໍສົ່ງຂ່າວໄປບອກພວກຜູ້ນຳຟີລິດສະຕິນວ່າ, “ຈົ່ງກັບມາອີກຄັ້ງ, ເພາະ
ລາວໄດ້ບອກຄວາມຈິງທຸກຢ່າງໃຫ້ແກ່ຂ້ອຍແລ້ວ.” ແລ້ວພວກຜູ້ປົກຄອງຟີລິດສະຕິນຈຶ່ງຂຶ້ນໄປຫານາງ, ພ້ອມທັງເອົາເງິນໃສ່ມືນາງພ້ອມ.19ນາງ
ໄດ້ກ່ອມແຊມຊັນນອນເທິງຕັກຂອງນາງ ແລະເອີ້ນໃຫ້ຜູ້ຫນຶ່ງມາຕັດຜົມທັງເຈັດປອຍເທິງອອກຈາກຫົວຂອງລາວ, ແລະ
ນາງກໍເລີ່ມເຮັດໃຫ້ລາວຫມົດແຮງ, ເພາະກຳລັງຂອງລາວໄດ້ຫມົດໄປແລ້ວ.
20ນາງຈຶ່ງຮ້ອງຂຶ້ນວ່າ, “ແຊມຊັນ! ພວກຟີລິດສະຕິນມາຫາເຈົ້າແລ້ວ!” ລາວໄດ້ຕື່ນຈາກຫລັບ ແລະເວົ້າວ່າ, “ຂ້ອຍຈະໄປເຫມືອນດັ່ງແຕ່ກ່ອນໆ
ແລະສັ່ນຕົວເອງໃຫ້ຫລຸດໄປ” ແຕ່ລາວບໍ່ຮູ້ວ່າ ພຣະຢາເວໄດ້ຊົງຈາກລາວໄປແລ້ວ.21ຕໍ່ມາ ພວກຟີລິດສະຕິນໄດ້ຈັບລາວ ແລະເຈາະຫນ່ວຍຕາ
ທັງສອງຂອງລາວອອກ. ພວກເຂົາໄດ້ນຳລາວໄປເມືອງກາຊາ ແລະໄດ້ໃສ່ໂສ້ທອງຜູກລາວໄວ້. ລາວໄດ້ໃຫ້ໂມ້ແປ້ງຢູ່ໃນຄຸກ.22ແຕ່ຜົມຂອງລາວ
ໄດ້ເລີ່ມປົ່ງຂຶ້ນຄືນອີກ ຫລັງຈາກຖືກຕັດອອກໄປ.
23ສ່ວນຜູ້ປົກຄອງຂອງຟີລິດສະຕິນໄດ້ເຕົ້າໂຮມກັນເພື່ອຖວາຍເຄື່ອງບູຊາອັນຍິ່ງໃຫ່ຍແດ່ພຣະດາໂກນ, ພຣະຂອງພວກເຂົາ,
ແລະພວກເຂົາຊື່ນຊົມຍິນດີ, “ພຣະຂອງພວກເຮົາໄດ້ເອົາຊະນະແຊມຊັນ, ສັດຕຣູຂອງພວກເຮົາ., ແລະໄດ້ວາງລາວຢູ່ໃນກຳມືຂອງພວກເຮົາ”.
24ເມື່ອປະຊາຊົນໄດ້ເຫັນແຊມຊັນ, ພວກເຂົາກໍສັນຣະເສີນພຣະຂອງເຂົາ, ແລະເວົ້າວ່າ, “ພຣະຂອງພວກເຮົາໄດ້ໃຫ້ພວກເຮົາຊະນະສັດຕຣູ
ຂອງພວກເຮົາ, ແລະໄດ້ມອບລາວໃຫ້ແກ່ພວກເຮົາ, ຜູ້ທຳລາຍປະເທດຂອງພວກເຮົາ, ຜູ້ທີ່ຂ້າພວກເຮົາຫລາຍຄົນ.”
25ໃນຂະນະທີ່ພວກເຂົາພາກັນຊົມຊື່ນຍິນດີຢູ່ນັ້ນ, ແລະພວກເຂົາເວົ້າວ່າ, “ຈົ່ງເອີ້ນແຊມຊັນມາ, ເພື່ອໃຫ້ລາວເຮັດໃຫ້ພວກເຮົາຫົວຂວັນ." ເມື່ອ
ພວກເຂົາໄດ້ພາແຊມຊັນອອກມາຈາກຄຸກ ແລະລາວກໍເຮັດໃຫ້ພວກເຂົາຫົວຂວັນໄດ້. ພວກເຂົາໄດ້ໃຫ້ລາວຢືນຢູ່ລະຫວ່າງກາງເສົາສອງຕົ້ນ.
26ແຊມຊັນໄດ້ເວົ້າຕໍ່ເດັກຊາຍຜູ້ຈູງມືລາວມານັ້ນວ່າ, “ຈົ່ງພາຂ້ອຍໄປຢືນຢູ່ແປະເສົາຄ້ຳເຫລົ່ານີ້ ເພື່ອຮອງຮັບຕຶກນີ້,
ເພື່ອທີ່ຂ້ອຍຈະອີງເສົາເຫລົ່ານີ້ໄດ້.”
27ໃນເວລານັ້ນ ຫໍໂຮງໄດ້ເຕັມໄປດ້ວຍທັງຊາຍແລະຍິງ. ພວກຜູ້ປົກຄອງຟີລິດສະຕິນທຸກໆຄົນກໍຢູ່ໃນທີ່ນັ້ນ. ຢູ່ເທິງຫລັງຄາພຽງກໍມີທັງຊາຍ ແລະ
ຍິງປະມານສາມພັນຄົນ, ຊຶ່ງພວກເຂົາກຳລັງແນມເບິ່ງແຊມຊັນເຮັດຕະຫລົກຢູ່.

 generated on Tue Jun 17 19:01:42 2025

[28]ແຊມຊັນໄດ້ຮ້ອງທູນຫາພຣະຢາເວວ່າ, “ຂ້າແດ່ພຣະຢາເວ, ຂໍໂຜດລະນຶກເຖິງຂ້ານ້ອຍ!  ຂໍ
ຊົງໂຜດໃຫ້ຂ້ານ້ອຍມີກຳລັງມະຫາສານອີກຄັ້ງຫນຶ່ງ, ພຣະເຈົ້າ, ເພື່ອຂ້ານ້ອຍຈະລ້າງແຄ້ນຄົນຟີລິດສະຕິນ
ໃຫ້ກັບຕາທັງສອງຂ້າງຂອງຂ້ານ້ອຍ.”[29]ແຊມຊັນກໍຈັບເສົາຄ້ຳກາງສອງຕົ້ນທີ່ຮອງຕຶກນັ້ນ, ແລະລາວໄດ້ຍັນເສົາທັງສອງຕົ້ນນັ້ນ,
ເສົາຫນຶ່ງດ້ວຍມືເບື້ອງຂວາຂອງລາວ ແລະອີກເສົາຫນຶ່ງດ້ວຍມືເບື້ອງຊ້າຍຂອງລາວ.
[30]ແຊມຊັນໄດ້ກ່າວວ່າ, “ຂໍໃຫ້ຂ້ານ້ອຍຕາຍພ້ອມກັບຄົນເມືອງຟີລິດສະຕິນນີ້ເຖີ້ນ!”. ລາວຊຸກເສົານັ້ນດ້ວຍກຳລັງຂອງລາວ ແລະຕຶກນັ້ນລົ້ມລົງ
ທັບພວກຜູ້ປົກຄອງ ແລະຄົນອື່ນທຸກໆ ຄົນຢູ່ໃນຕຶກນັ້ນ. ດັ່ງນັ້ນ ຄົນຕາຍທີ່ລາວໄດ້ຂ້າເມື່ອລາວຕາຍແມ່ນຫລາຍກວ່າຄົນທີ່ລາວໄດ້ຂ້າ
ເມື່ອຕອນລາວຍັງມີຊີວິດຢູ່.[31]ຫລັງຈາກນັ້ນ ພວກຍາດພີ່ນ້ອງ ແລະຄອບຄົວຂອງພໍ່ລາວທັງຫມົດ. ພວກເຂົາກໍໄດ້ພາກັນມາເອົາສົບລາວກັບຄືນ
ເມືອ, ແລ້ວຝັງສົບຂອງລາວຢູ່ລະຫວ່າງເມືອງໂຊຣາ ແລະເມືອງເອຊະຕາໂອນ ຢູ່ທີ່ບ່ອນຝັງສົບຂອງມາໂນອາ, ພໍ່ຂອງລາວ. ແຊມຊັນໄດ້ປົກຄອງ
ຄົນອິສະຣາເອນຢູ່ເປັນເວລາຊາວປີ.


generated on Tue Jun 17 19:01:42 2025

17 [1]ມີຊາຍຄົນຫນຶ່ງຢູ່ເຂດເນີນພູເຂົາເອຟຣາອິມ, ແລະລາວ ຊື່ມີກາ.[2]ລາວເວົ້າກັບແມ່ຂອງລາວວ່າ, “ເງິນຫນຶ່ງພັນຫນຶ່ງຮ້ອຍຫລຽນ ຊຶ່ງມີຄົນ
ລັກໄປຈາກແມ່, ແລະແມ່ກໍໄດ້ສາບແຊ່ງ, ທີ່ລູກໄດ້ຍິນມານັ້ນ -ເບິ່ງແມ! ເງິນນັ້ນຢູ່ທີ່ຂ້ອຍ. ຂ້ອຍໄປລັກເອົາມາເອງ,” ແມ່ຂອງລາວຈຶ່ງເວົ້າ
ວ່າ “ຂໍພຣະຢາເວ ຊົງອ່ວຍພອນໃຫ້ລູກຂອງຂ້ານ້ອຍເຖີດ”.

[3]ລາວໄດ້ເອົາເງິນຈຳນວນຫນຶ່ງພັນຫນຶ່ງຮ້ອຍຫລຽນ ມາຄືນໃຫ້ແມ່ຂອງລາວ ແລະແມ່ລາວເວົ້າວ່າ, "ແມ່ໄດ້ແຍກເງິນນີ້ຖວາຍແດ່ພຣະຢາເວ
ເພື່ອໃຫ້ລູກຂອງແມ່ທີ່ຈະເຮັດຮູບແກະສະລັກ ແລະຮູບຫລໍ່ໂລຫະຕ່າງໆ. ບັດນີ້ ແມ່ຈຶ່ງໄດ້ຄືນເງິນໃຫ້ແກ່ລູກ".[4]ເມື່ອລາວໄດ້ຄືນເງິນໃຫ້ແກ່
ແມ່ຂອງລາວແລ້ວ, ແມ່ກໍນຳເງິນສອງຮ້ອຍຫລຽນ, ແລະມອບໃຫ້ກັບຊ່າງເງິນ ເຮັດເປັນຮູບແກະສະຫລັກ ແລະຮູບຫລໍ່ໂລຫະຕ່າງໆ,
ແລະພວກເຂົາໄດ້ຕັ້ງຮູບເຫລົ່ານັ້ນໄວ້ຢູ່ໃນເຮືອນຂອງມີກາ.
[5]ມີກາຄົນນີ້ມີເຮືອນພຣະຫລັງຫນຶ່ງ ແລະ ລາວເຮັດຮູບເອໂຟດ ແລະ ຮູບພຣະ ແລະ ບັນດາພຣະປະຈຳບ້ານ,
ແລະລາວໄດ້ຈ້າງລູກຊາຍຄົນຫນຶ່ງຂອງບັນດາລູກຊາຍຂອງລາວໃຫ້ເປັນປະໂລຫິດຂອງລາວ.[6]ໃນສະໄຫມນັ້ນ ຍັງບໍ່ມີກະສັດໃນອິສະຣາເອນ,
ແລະ ທຸກຄົນກໍເຮັດຕາມທີ່ຕົນເອງເຫັນດີ.
[7]ໃນຂະນະນັ້ນ ມີຊາຍຫນຸ່ມຄົນຫນຶ່ງຊາວເມືອງເບັດເລເຮັມໃນຢູດາ ຈາກຕະກູນເຜົ່າຢູດາ, ຊຶ່ງເປັນຄົນເລວີ. ລາວອາໄສຢູ່ທີ່ນັ້ນ
ເພື່ອປະຕິບັດຫນ້າທີ່ຂອງລາວ.[8]ຊາຍນັ້ນ ໄດ້ຍ່າງອອກຈາກເມືອງເບັດເລເຮັມໃນຢູດາ ເພື່ອທ່ຽວຫາບ່ອນພັກອາໄສ.
ໃນຂະນະທີ່ລາວກຳລັງເດີນທາງຢູ່, ລາວໄດ້ມາເຖິງບ້ານມີກາຢູ່ເຂດພູເຂົາເອຟຣາອິມ.[9]ມີກາຈຶ່ງເວົ້າກັບລາວວ່າ “ທ່ານມາຈາກໃສ”
ຊາຍຄົນນັ້ນຕອບລາວວ່າ, “ຂ້ອຍເປັນຄົນເລວີຊາວບ້ານເບັດເລເຮັມໃນຢູດາ, ຂອ້ຍເດີນທາງທ່ຽວຫາບ່ອນທີ່ຂ້ອຍຈະພັກອາໃສ”.
[10]ມີກາຈຶ່ງກ່າວແກ່ລາວວ່າ “ຈົ່ງພັກກັບຂ້ອຍເຖີດ, ແລະມາເປັນພໍ່ ແລະປະໂລຫິດຂອງຂ້ອຍ. ຂ້ອຍຈະໃຫ້ເງິນເຈົ້າໃຫ້ປີລະສິບຫລຽນ, ແລະໃຫ້
ເຄື່ອງນຸ່ງຫນຶ່ງຊຸດ, ແລະໃຫ້ອາຫານແກ່ເຈົ້າດ້ວຍ”. ດັ່ງນັ້ນຄົນເລວີຄົນນັ້ນຈຶ່ງເຂົ້າໄປໃນເຮືອນຂອງລາວ.[11]ຄົນເລວີຄົນນັ້ນກໍພໍໃຈທີ່ຈະຢູ່ກັບມີກາ,
ແລະຊາຍຫນຸ່ມຄົນນັ້ນກໍເປັນຄືກັບລູກຊາຍຂອງລາວຄົນຫນຶ່ງ.
[12]ມີກາກໍໄດ້ແຍກຄົນເລວີຄົນນັ້ນໄວ້ໃຫ້ປະຕິບັດພິທີການຕ່າງໆ ແລະ ຊາຍຫນຸ່ມຄົນນັ້ນໃຫ້ເປັນປະໂລຫິດຂອງລາວ ແລະ ຢູ່ໃນເຮືອນຂອງລາວ.
[13]ມີກາກ່າວວ່າ, “ບັດນີ້ຂ້ອຍຮູ້ແລ້ວວ່າ ພຣະຢາເວຈະຊົງເຮັດສິ່ງດີໆແກ່ຂ້ອຍ, ເພາະວ່າຄົນເລວີຄົນນີ້ໄດ້ມາເປັນປະໂລຫິດຂອງຂ້ອຍ.”


generated on Tue Jun 17 19:01:42 2025

18 [1]ໃນສະໄຫມນັ້ນບໍ່ມີກະສັດໃນອິສະຣາເອນ ແລະຄົນຕະກູນດານຍັງຫາບ່ອນທີ່ດິນແດນທີ່ຈະພັກອາໄສຢູ່, ຈົນເຖິງມື້ນັ້ນ ພວກເຂົາບໍ່ໄດ້ມໍ-
ຣະດົກຈາກບັນດາເຜົ່າອິສະຣາເອນ.[2]ດັ່ງນັ້ນ ຄົນດານໄດ້ສົ່ງຄົນຫ້າຄົນຈາກບັນດາເຜົ່າຂອງພວກເຂົາ, ຜູ້ມີຄວາມສຳນານການສູ້ຮົບມາ
ຈາກໂຊຣາ ແລະ ຈາກເອຊະຕາໂອນ ເພື່ອອອກເດີນທາງຢ່າງສອດແນມ, ແລະ ກວດກາເບິ່ງແຜ່ນດິນນັ້ນ. ພວກເຂົາໄດ້ກ່າວກັບຄົນເຫລົ່ານັ້ນ
ວ່າ, “ຈົ່ງໄປ ແລະ ກວດກາເບິ່ງແຜ່ນດິນນັ້ນ”. ພວກເຂົາກໍມາຮອດເຂດເນີນພູເຂົາເອຟຣາອິມ, ມາຮອດເຮືອນຂອງມີກາ, ແລະ
ພວກເຂົາກໍໄດ້ຄ້າງຄືນຢູ່ທີ່ນັ້ນ.

[3]ເມື່ອພວກເຂົາຢູ່ໃກ້ເຮືອນຂອງມີກາ, ພວກເຂົາກໍຈື່ສຽງຄົນເລວີຫນຸ່ມຄົນນັ້ນໄດ້. ດັ່ງນັ້ນ ພວກເຂົາຈຶ່ງແວະເຂົ້າໄປ ແລະຖາມລາວວ່າ,
“ແມ່ນໃຜພາທ່ານມາບ່ອນນີ້? ເຈົ້າມາເຮັດຫຍັງຢູ່ບ່ອນນີ້? ນີ້ເປັນຫຍັງເຈົ້າຈຶ່ງຢູ່ບ່ອນນີ້?”.[4]ລາວໄດ້ຕອບຄົນເຫລົ່ານັ້ນວ່າ, “ມີກາເຮັດສິ່ງນີ້ແກ່
ຂ້ອຍ, ລາວຈ້າງຂ້ອຍໃຫ້ເປັນປະໂລຫິດຂອງລາວ”.
[5]ພວກເຂົາກໍເວົ້າກັບລາວວ່າ, “ຂໍໂຜດທູນຖາມພຣະເຈົ້າໃຫ້ແດ່ ເພື່ອພວກເຮົາຈະຮູ້ວ່າການເດີນທາງຂອງພວກເຮົາກຳລັງຈະໄປນີ້ ຈະປະສົບຜົນ
ສຳເລັດຫລືບໍ່?”.[6]ປະໂລຫິດນັ້ນຈຶ່ງຕອບພວກເຂົາທັງຫລາຍວ່າ, “ຈົ່ງໄປດ້ວຍສັນຕິສຸກເຖີດ. ພຣະຢາເວຈະນຳທາງໃຫ້ພວກເຈົ້າໄປ”.
[7]ເມື່ອຊາຍທັງຫ້າຄົນກໍຈາກໄປ ແລະມາຮອດເມືອງລາອິດ, ເຫັນປະຊາຊົນທີ່ຢູ່ເມືອງນັ້ນມີຊີວິດຢູ່ໃນຄວາມປອດໄພ, ເຫມືອນກັບຄົນຊີ-
ໂດນອາໄສຢູ່, ຢ່າງສະຫງົບ, ແລະບໍ່ມີຄວາມກັງວົນ. ບໍ່ມີໃຜມາຢຶດຄອງ ຫລືກົດຂີ່ຂົ່ມເຫັງພວກເຂົາ ໃນແຜ່ນດິນນັ້ນ. ພວກເຂົາໄດ້ອາໄສຢູ່ຫ່າງ
ໄກຈາກຄົນຊີໂດນ, ແລບໍ່ມີການພົວພັນກັບຄົນອື່ນເລີຍ.[8]ເມື່ອພວກເຂົາກັບມາຫາເຜົ່າໂຊຣາ ແລະເອຊະຕາໂອນຂອງພວກເຂົາ. ຍາດພີ່ນ້ອງ
ຂອງພວກເຂົາຈຶ່ງຖາມພວກເຂົາວ່າ, “ພວກເຈົ້າໄດ້ພົບເຫັນຫຍັງແດ່?”.
[9]ພວກເຂົາຕອບວ່າ, “ມາເຖີດ! ໃຫ້ພວກເຮົາໄປໂຈມຕີພວກເຂົາສາ! ພວກເຮົາໄດ້ເຫັນແຜ່ນດິນນັ້ນ ແລະເປັນແຜ່ນດິນທີ່ດີຫລາຍ.
ພວກເຈົ້າບໍ່ໄດ້ເຮັດຫຍັງເລີຍບໍ? ຢ່າລໍຊ້າທີ່ຈະໂຈມຕີ ແລະຢຶດຄອງແຜ່ນດິນນັ້ນ.[10]ເມື່ອທ່ານທັງຫລາຍໄປ, ພວກທ່ານຈະໄດ້ພົບເຫັນປະຊາຊົນ
ຜູ້ຄິດວ່າພວກເຂົາປອດໄພ. ແລະແຜ່ນດິນທີ່ກວ້າງຂວາງ! ພຣະເຈົ້າຊົງມອບແຜ່ນດິນນີ້ໄວ້ແກ່ພວກທ່ານແລ້ວ- ເປັນສະຖານທີ່ ຊຶ່ງບໍ່
ຂາດແຄນຫຍັງເລີຍໃນແຜ່ນດິນນີ້.”
[11]ຄົນເຜົ່າດານຫົກຮ້ອຍຄົນ, ພ້ອມດ້ວຍເຄື່ອງອາວຸດສົງຄາມ, ອອກເດີນທາງຈາກໂຊຣາ ແລະເອຊະຕາໂອນ.[12]ພວກເຂົາຂຶ້ນໄປ ແລະຕັ້ງຄ້າຍຢູ່ທີ່
ກີຣິອາດ-ເຢອາຣິມໃນຢູດາ. ນີ້ແມ່ນເຫດຜົນ ທີ່ປະຊາຊົນເອີ້ນສະຖານທີ່ນີ້ວ່າທີ່ຫມັ້ນຂອງພວກດານ ຈົນເຖິງທຸກມື້ນີ້; ເມືອງນີ້ຢູ່ທາງ
ທິດຕາເວັນຕົກຂອງເມືອງກີຣິອາດ-ເຢອາຣິມ.
[13]ພວກເຂົາກໍຜ່ານຈາກບ່ອນນັ້ນໄປຍັງເຂດເນີນພູເຂົາເອຟຣາອິມ ແລະມາຮອດເຮືອນຂອງມີກາ.[14]ແລ້ວຊາຍທັງຫ້າຄົນທີ່ໄປສອດແນມເບິ່ງເມືອງ
ລາອິດກໍບອກແກ່ພີ່ນ້ອງຂອງຕົນວ່າ, “ພວກທ່ານຮູ້ບໍ່ວ່າໃນເຮືອນເຫລົ່ານີ້ມີຮູບເອໂຟດ, ພຣະປະຈຳບ້ານຕ່າງໆ, ຮູບພຣະຮູບແກະສະຫລັກ
ແລະຮູບຫລໍ່ໂລຫະ? ຂໍໃຫ້ຕັດສິນໃຈດຽວນີ້ວ່າພວກເຮົາຈະເຮັດຫຍັງ?.
[15]ດັ່ງນັ້ນ ພວກເຂົາຈຶ່ງກັບເຂົ້າໄປທີ່ນັ້ນ ແລະມາຮອດເຮືອນຂອງຄົນເລວີຫນຸ່ມຄົນນັ້ນ ຄືທີ່ເຮືອນຂອງມີກາ, ແລະພວກເຂົາຖາມທຸກສຸກຂອງລາວ.
[16]ບັດນີ້ ຄົນດານທີ່ຖືອາວຸດສົງຄາມຫົກຮ້ອຍຄົນ ກໍໄດ້ຢືນຢູ່ທີ່ທາງເຂົ້າປະຕູຮົ້ວນັ້ນ.
[17]ຊາຍທັງຫ້າຄົນທີ່ອອກໄປສອດແນມເບິ່ງແຜ່ນດິນນັ້ນ ກໍຍ່າງເຂົ້າໄປທີ່ນັ້ນ ແລະພວກເຂົາໄດ້ເອົາຮູບແກະສະຫລັກເອໂຟດ, ຮູບ
ພຣະປະຈຳບ້ານຕ່າງໆ, ແລະຮູບຫລໍ່ໂລຫະຕ່າງໆໄປ, ໃນຂະນະທີ່ ປະໂລຫິດ ກໍຢືນຢູ່ທີ່ທາງເຂົ້າປະຕູຮົ້ວ ກັບທະຫານຫົກຮ້ອຍຄົນຖືອາວຸດເຮັດ
ສົງຄາມນັ້ນ.[18]ເມື່ອຄົນເຫລົ່ານີ້ ໄດ້ເຂົ້າໄປໃນເຮືອນຂອງມີກາ ແລະນຳເອົາຮູບແກະສະຫລັກເອໂຟດ, ຮູບພຣະປະຈຳບ້ານຕ່າງໆ, ແລະຮູບ
ຫລໍ່ໂລຫະຕ່າງໆໄປ, ປະໂລຫິດຖາມພວກເຂົາວ່າ, “ພວກທ່ານກຳລັງເຮັດຫຍັງ?”
[19]ຄົນເຫລົ່ານັ້ນຈຶ່ງຕອບພວກເຂົາວ່າ, “ງຽບໄວ້ໆ! ຈົ່ງເອົາມືປິດປາກຂອງເຈົ້າໄວ້ ແລະມາກັບພວກເຮົາສາ, ແລະມາເປັນພໍ່ ແລະເປັນປະໂລຫິດ
ຂອງເຮົາ. ດີກວ່າເຈົ້າຈະເປັນປະໂລຫິດໃນເຮືອນຂອງຊາຍຄົນດຽວ ຫລືວ່າຈະເປັນປະໂລຫິດຂອງເຜົ່າ ຊຶ່ງເປັນຕະກູນຫນຶ່ງຂອງອິດສະ
ຣາເອນ?”[20]ໃຈຂອງປະໂລຫິດນັ້ນກໍຍິນດີ, ລາວຈຶ່ງເອົາຮູບເອໂຟດ, ຮູບພະປະຈຳບ້ານຕ່າງໆ ແລະຮູບແກະສະຫລັກໄປ,
ແລະໄດ້ຕາມຄົນເຫລົ່ານັ້ນໄປ.
[21]ດັ່ງນັ້ນ ພວກເຂົາກໍຫນີອອກໄປ. ແລະພວກເຂົາໃຫ້ເດັກນ້ອຍພ້ອມທັງຝູງສັດ ແລະຊັບສິນຂອງພວກເຂົາຢູ່ຂ້າງຫນ້າພວກເຂົາເອງ.
[22]ເມື່ອພວກເຂົາໄປຫ່າງຈາກເຮືອນມີກາແລ້ວ, ບັນດາຄົນທີ່ຢູ່ໃນເຮືອນໃກ້ຄຽງກັບເຮືອນຂອງມີກາ ກໍຖືກເອີ້ນອອກມາລວມຕົວກັນ,
ແລະພວກເຂົາກໍໄດ້ຕາມໄປຈົນເຜົ່າດານ.[23]ພວກເຂົາໄດ້ເອີ້ນຄົນດານ, ພວກເຂົາກໍຫັນກັບມາເວົ້າກັບມີກາວ່າ, “ເປັນຫຍັງ ພວກເຈົ້າ
ຈຶ່ງເອີ້ນຄົນພວກນີ້ກັບ?”.
[24]ມີກາຕອບພວກເຂົາວ່າ “ພວກເຈົ້າໄດ້ລັກພຣະຕ່າງໆຂອງຂ້ອຍ ຊຶ່ງຂ້ອຍສ້າງຂຶ້ນ, ແລະພວກເຈົ້ານຳປະໂລຫິດຂອງຂ້ອຍໄປ,
ແລະພວກເຈົ້າກຳລັງຈະໄປ. ຂ້ອຍຈະມີຫຍັງເຫລືອຢູ່ບໍ? ພວກເຈົ້າຍັງຈະຖາມຂ້ອຍໄດ້ແນວໃດ, ‘ແມ່ນຫຍັງທີ່ເຮັດໃຫ້ພວກເຈົ້າຫຍຸ້ງຍາກ?’”.
[25]ຄົນດານຈຶ່ງຕອບລາວວ່າ, “ເຈົ້າຢ່າເວົ້າຫຍັງໃຫ້ພວກເຮົາໄດ້ຍິນອີກ, ຖ້າບໍ່ດັ່ງນັ້ນ ມີບາງຄົນທີ່ກຳລັງໃຈຮ້າຍຫລາຍ ກໍຈະໄປຕີເຈົ້າ,
ແລະເຈົ້າພ້ອມຄອບຄົວຂອງເຈົ້າ ກໍຈະຖືກຂ້າຖິ້ມ.”[26]ແລ້ວຄົນດານກໍໄດ້ເດີນທາງຕໍ່ໄປຕາມທາງຂອງພວກເຂົາ. ເມື່ອມີກາເຫັນວ່າພວກ-
ເຂົາເຫລົ່ານັ້ນມີກຳລັງຫລາຍກວ່າລາວຫລາຍ, ແລະຈຶ່ງຫັນກັບ ແລະໄດ້ກັບໄປເຮືອນຂອງຕົນ.
[27]ຄົນເຜົ່າດ່ານ ນຳເອົາສິ່ງທີ່ມີກາສ້າງຂຶ້ນ, ແລະ ນຳປະໂລຫິດຂອງລາວມານຳ, ແລະ ພວກເຂົາກໍເດີນທາງມາຮອດລາອິດ ມາເຖິງປະຊາຊົນທີ່ຢູ່
ຢ່າງສະຫງົບສຸກ ແລະ ບໍ່ມີຄວາມກັງວົນ, ແລະພວກເຂົາໄດ້ຂ້າຄົນເຫລົ່ານັ້ນດ້ວຍຄົມດາບ ແລະເອົາໄຟເຜົາເມືອງຖິ້ມ.[28]ບໍ່ມີຜູ້ໃດມາ
ຊ່ວຍພວກເຂົາ ເພາະວ່າພວກເຂົາຢູ່ໄກຈາກເມືອງຊີໂດນ, ແລະ ພວກເຂົາບໍ່ໄດ້ພົວພັນກັບຄົນອື່ນເລີຍ. ເມືອງນີ້ເປັນຢູ່ໃນຮ່ອມພູເຂົາຊຶ່ງຢູ່ໃກ້ກັບ
ເມືອງເບັດເຣໂຮບ. ຄົນດານ ກໍສ້າງເມືອງຂຶ້ນໃຫມ່ ແລະ ອາໃສຢູ່ບ່ອນນັ້ນ.[29]ພວກເຂົາຕັ້ງຊື່ເມືອງນັ້ນວ່າດານ, ຕາມຊື່ຂອງດານທີ່ເປັນບັນພະບູ-
ຣຸດຂອງພວກເຂົາ, ຜູ້ຊຶ່ງຫນຶ່ງໃນບັນດາລູກຊາຍຂອງອິສະຣາເອນ. ແຕ່ເມືອງນີ້ເຄີຍມີຊື່ວ່າເມືອງລາອິດ.
[30]ຄົນເຜົ່າດານກໍຕັ້ງຮູບແກະສະຫລັກໄວ້ສຳລັບພວກເຂົາເອງ. ສ່ວນໂຢນາທານລູກຊາຍເກໂຊມ, ລູກຊາຍຂອງມານາເຊ, ລາວ
ແລະລູກຊາຍເປັນປະໂລຫິດໃຫ້ແກ່ເຜົ່າຄົນດານຈົນຮອດສະໄຫມທີ່ແຜ່ນດິນຕົກໄປເປັນຊະເລີຍ.[31]ດັ່ງນັ້ນ ພວກເຂົາໄດ້ຕັ້ງຮູບແກະສະຫລັກ ຊຶ່ງ
ມີກາໄດ້ສ້າງຂຶ້ນມານັ້ນຕະຫລອດເວລາທີ່ພຣະວິຫານຂອງພຣະເຈົ້າຢູ່ທີ່ເມືອງຊີໂລ.


generated on Tue Jun 17 19:01:42 2025

## 19

[1]ໃນສະໄຫມນັ້ນ, ເມື່ອບໍ່ມີກະສັດໃນອິສະຣາເອນ, ມີຜູ້ຊາຍຄົນ, ເລວີຄົນຫນຶ່ງ, ອາໃສຢູ່ດິນແດນຫ່າງໄກທີ່ສຸດຢູ່ໃນເຂດພູເຂົາເອຟຣາອິມ.
ລາວໄດ້ເອົາຍິງຄົນຫນຶ່ງຈາກເມືອງເບັດເລເຮັມໃນຢູດາມາເປັນເມຍນ້ອຍຂອງຕົນເອງ.[2]ແຕ່ເມຍນ້ອຍຂອງລາວບໍ່ຊື່ສັດຕໍ່ລາວ; ນາງໄດ້ຈາກລາວ
ແລະ ກັບຄືນເມືອເຮືອນຂອງພໍ່ນາງຢູ່ທີ່ເບັດເລເຮັມໃນຢູດາ. ນາງໄດ້ພັກອາໄສຢູ່ບ່ອນນັ້ນເປັນເວລາສີ່ເດືອນ.

[3]ແລ້ວຜົວຂອງນາງກໍລຸກຂຶ້ນ ແລະໄປຕາມຫານາງ ເພື່ອຈະຊວນໃຫ້ນາງກັບຄືນມາ. ຄົນໃຊ້ຄົນຫນຶ່ງຂອງລາວໄດ້ໄປນໍາລາວ ພ້ອມລາຄູ່ຫນຶ່ງ.
ນາງພາລາວເຂົ້າໃນເຮືອນພໍ່ຂອງນາງ. ເມື່ອພໍ່ຂອງນາງເຫັນລາວ, ເພິ່ນກໍມີຄວາມຍິນດີຫລາຍ.[4]ພໍ່ເຖົ້າຂອງລາວ, ຄືພໍ່ຂອງຜູ້ຍິງຄົນນັ້ນ, ໄດ້ຊວນ
ໃຫ້ລາວພັກຢູ່ນັ້ນສາມມື້. ພວກເຂົາກິນ, ແລະດື່ມ, ແລະພວກເຂົາພັກຄ້າງຄືນຢູ່ທີ່ນັ້ນ.
[5]ຢູ່ມາ ມື້ທີສີ່ ພວກເຂົາກໍຕື່ນຂຶ້ນແຕ່ເຊົ້າມືດ ແລະລາວໄດ້ກຽມຕົວຈະອອກເດີນທາງ, ແຕ່ພໍ່ຂອງຍິງສາວນັ້ນເວົ້າກັບລູກເຂີຍຂອງຕົນວ່າ, “ກິນ
ເຂົ້າຈີ່ອີກຈັກຫນ້ອຍໃຫ້ມີກໍາລັງ, ແລ້ວພວກເຈົ້າຈຶ່ງອອກເດີນທາງໄປ”.[6]ດັ່ງນັ້ນ ຊາຍສອງຄົນນັ້ນກໍນັ່ງລົງກິນ ແລະດື່ມນໍາກັນ. ຈາກນັ້ນພໍ່ຂອງ
ຍິງນັ້ນກໍເວົ້າວ່າ, “ຂໍໃຫ້ພັກຄ້າງຄືນຢູ່ທີ່ນີ້ອີກເຖີດ ແລະເຮັດຈິດໃຈໃຫ້ເບີກບານ”.
[7]ເມື່ອຄົນເລວີໄດ້ລຸກຂຶ້ນຈະອອກເດີນທາງໄປ, ພໍ່ຂອງຍິງສາວຄົນນັ້ນກໍຊັກຊວນໃຫ້ລາວໃຫ້ລາວຢູ່ຕໍ່, ດັ່ງນັ້ນ ລາວຈຶ່ງປຽນແຜນ
ແລະໄດ້ຄ້າງຄືນທີ່ນັ້ນອີກ.[8]ໃນວັນທີຫ້າ ລາວກໍຕື່ນແຕ່ເຊົ້າມືດເພື່ອຈະອອກເດີນທາງໄປ, ພໍ່ຂອງຍິງສາວຄົນນັ້ນເວົ້າວ່າ
“ພັກເອົາແຮງອີກຈັກຫນ່ອຍ, ແລະລໍຖ້າຈົນຮອດຕອນບ່າຍເຖີດ”. ດັ່ງນັ້ນ ຊາຍທັງສອງກໍໄດ້ກິນອາຫານທ່ຽງນໍາກັນ.
[9]ເມື່ອຄົນເລວີ ແລະເມຍນ້ອຍກັບຄົນໃຊ້ຂອງລາວ ໄດ້ລຸກຂຶ້ນຈະອອກເດີນທາງ, ພໍ່ເຖົ້າຂອງລາວ, ຄືພໍ່ຂອງຍິງສາວນັ້ນ ກໍເວົ້າກັບລາວວ່າ, “ເບິ່ງ
ແມ, ນີ້ກໍໃກ້ຈະຄໍ່າແລ້ວ. ຂໍຈົ່ງພັກທີ່ນີ້ຈັກຄືນຫນຶ່ງ ແລະເຮັດຈິດໃຈໃຫ້ເບີກບານ. ມື້ອື່ນເຊົ້າພວກເຈົ້າຕື່ນແຕ່ເຊົ້າ ແລະ ເດີນທາງກັບບ້ານກໍໄດ້”.
[10]ແຕ່ຄົນເລວີນັ້ນບໍ່ຍອມພັກຄ້າງຄືນ. ລາວຈຶ່ງລຸກຂຶ້ນ ແລະອອກເດີນທາງໄປ. ລາວໄດ້ເດີນທາງໄປເມືອງເຢບຸດ(ຄືເມືອງເຢຣູຊາເລັມ). ລາວມີລາ
ສອງໂຕທີ່ມີອານ- ແລະເມຍນ້ອຍຂອງລາວກໍໄປນໍາລາວ.[11]ເມື່ອພວກເຂົາມາໃກ້ເມືອງເຢບຸດກໍເກືອບຫມົດມື້, ແລະຄົນໃຊ້ຈຶ່ງບອກນາຍຂອງຕົນ
ວ່າ, “ມາເຖີດ, ພວກເຮົາໄປແວະທີ່ເມືອງຂອງຄົນເຢບຸດກ່ອນ ແລະນອນຄ້າງຄືນຢູ່ໃນເມືອງນີ້ເຖີດ”.
[12]ນາຍຂອງລາວຕອບກັບລາວວ່າ, “ພວກເຮົາຈະບໍ່ແວະເຂົ້າໄປໃນເມືອງຂອງຄົນຕ່າງດ້າວ ຜູ້ທີ່ບໍ່ແມ່ນຄົນອິສະຣາເອນ. ພວກເຮົາຈະຜ່ານໄປ
ຮອດເມືອງກີເບອາ”.[13]ຄົນເລວີຄົນນັ້ນໄດ້ເວົ້າກັບຄົນຫນຸ່ມຂອງລາວວ່າ, “ມາເຖີດ, ໃຫ້ພວກເຮົາເຂົ້າໄປໃກ້ບ່ອນເຫລົ່ານັ້ນຈັກແຫ່ງຫນຶ່ງ, ແລະ
ນອນຄ້າງຄືນຢູ່ທີ່ກີເບອາ ຫລືທີ່ຣາມາ”.
[14]ດັ່ງນັ້ນພວກເຂົາຈຶ່ງເດີນທາງຜ່ານໄປ, ແລະ ເມື່ອຕາເວັນກໍຕົກແລ້ວ ພວກເຂົາກໍມາໃກ້ກີເບອາຊຶ່ງເປັນຂອງຄົນເບັນຢາມິນ.[15]ພວກເຂົາຈຶ່ງແວະ
ເຂົ້າໄປທີ່ນັ້ນ ເພື່ອນອນຄ້າງຄືນທີ່ເມືອງກີເບອາ. ພວກເຂົາແວະເຂົ້າໄປ ແລະ ນັ່ງຢູ່ທີ່ຖະຫນົນໃນເມືອງນັ້ນ ເພາະວ່າບໍ່ມີໃຜພາພວກເຂົາເຂົ້າໄປ
ນອນໃນເຮືອນຂອງເຂົາເລີຍ.
[16]ແຕ່ຫລັງຈາກນັ້ນ ມີຊາຍເຖົ້າຄົນຫນຶ່ງກໍາລັງກັບມາຈາກເຮັດນາເປັນເວລາຄໍ່າແລ້ວ. ລາວເປັນຄົນແຖບພູເຂົາເອຟຣາອິມ, ແລະລາວມາອາ-
ໄສຢູ່ໃນເມືອງກີເບອາບໍ່ດົນປານໃດ. ແຕ່ຊາຍຄົນນັ້ນອາໄສຢູ່ທີ່ນັ້ນເປັນຄົນເບັນຢາມິນ.[17]ເມື່ອລາວເງີຍຫນ້າຂຶ້ນເຫັນຜູ້ເດີນທາງຄົນນັ້ນນັ່ງຢູ່ທີ່ຖະ-
ຫນົນໃນເມືອງ. ຊາຍຜູ້ເຖົ້າຄົນນັ້ນກໍຖາມວ່າ, “ພວກທ່ານຈະໄປໃສ ແລະພວກທ່ານມາຈາກໃສ?”.
[18]ຄົນເລວີຄົນນັ້ນຈຶ່ງຕອບລາວວ່າ, “ພວກເຮົາກໍາລັງເດີນທາງຈາກເບັດເລເຮັມໃນຢູດາ ຈະໄປທີ່ຍັງດິນແດນຫ່າງໄກທີ່ສຸດຂອງແຖບພູເຂົາ
ເອຟຣາອິມ, ຊຶ່ງຂ້ອຍມາຈາກບ່ອນນັ້ນ, ຂ້ອຍໄປເບັດເລເຮັມໃນຢູດາມາ ແລະຂ້ອຍຈະກັບໄປພຣະວິຫານພຣະຢາເວ, ບໍ່ມີໃຜພາຂ້ອຍເຂົ້າໄປ
ພັກໃນເຮືອນຂອງເຂົາເລີຍ.[19]ພວກເຮົາມີເຟືອງ ແລະອາຫານທີ່ຈະລ້ຽງລາຂອງພວກເຮົາ, ແລະກໍມີທັງອາຫານ ແລະເຫລົ້າອະງຸ່ນທີ່ລ້ຽງ
ສໍາລັບຕົນເອງ ແລະສາວຮັບໃຊ້ຂອງເຈົ້າທີ່ນີ້, ແລະສໍາລັບຄົນຫນຸ່ມຄົນນີ້ກັບພວກຜູ້ຮັບໃຊ້ຂອງເຈົ້າດ້ວຍ. ພວກເຮົາບໍ່ຂາດສິ່ງໃດເລີຍ."
[20]ຊາຍຜູ້ເຖົ້າຄົນນັ້ນໄດ້ຕ້ອນຮັບພວກເຂົາວ່າ, “ຂໍສັນຕິສຸກຈົ່ງມີແກ່ທ່ານເຖີດ, ຂ້ອຍຈະເບິ່ງແຍງໃນສິ່ງທີ່ພວກເຈົ້າຕ້ອງການທັງຫມົດ. ຂໍພຽງແຕ່
ຢ່ານອນຄ້າງຄືນຢູ່ຖະຫນົນເມືອງນີ້ເລີຍ”.[21]ດັ່ງນັ້ນ, ຊາຍຄົນນັ້ນຈຶ່ງໄດ້ພາຄົນເລວີເຂົ້າໄປໃນເຮືອນຂອງລາວ ແລະເອົາອາຫານໃຫ້ແກ່
ລາເຫລົ່ານັ້ນ. ພວກເຂົາກໍລ້າງຕີນຂອງຕົນ ແລະກິນອາຫານ ແລະດື່ມ.
[22]ໃນຂະນະທີ່ພວກເຂົາກໍາລັງມີຄວາມຍິນດີຢູ່ນັ້ນ. ບາງຄົນຊາວເມືອງນັ້ນ, ທີ່ເປັນນັກເລງມາລ້ອມເຮືອນນັ້ນ, ທຸບປະຕູ, ຮ້ອງບອກຊາຍຜູ້ເຖົ້າ, ຜູ້
ເປັນເຈົ້າຂອງເຮືອນນັ້ນວ່າ, “ຈົ່ງນໍາຜູ້ຊາຍທີ່ເຂົ້າມາຢູ່ໃນເຮືອນຂອງເຈົ້າມາໃຫ້ພວກເຮົາຮ່ວມເພດກັບລາວ”.[23]ຊາຍຜູ້ເປັນເຈົ້າຂອງເຮືອນກໍອອກ
ໄປເວົ້າກັບພວກເຂົາວ່າ, “ຢ່າເລີຍ, ພີ່ນ້ອງຂອງຂອ້ຍ, ຂໍຢ່າເຮັດສິ່ງຊົ່ວຮ້າຍຢ່າງນີ້ເລີຍ! ເພາະຊາຍຄົນນີ້ເປັນແຂກໃນເຮືອນຂອງຂ້ອຍ, ຂໍຢ່າ
ເຮັດສິ່ງທີ່ຊົ່ວຮ້າຍນີ້ເລີຍ!.
[24]ເບິ່ງແມ, ລູກສາວພົມມະຈາລີຄົນຫນຶ່ງຂອງຂ້ອຍ ແລະເມຍນ້ອຍຂອງລາວຢູ່ທີ່ນີ້. ຂໍໃຫ້ຂ້ອຍຈະພາພວກນາງອອກມາໃຫ້ພວກທ່ານດຽວນີ້. ຈົ່ງ
ຂົ່ມຂືນພວກນາງ ຫລືເຮັດຫຍັງແກ່ພວກນາງຕາມໃຈມັກສາ, ແຕ່ຂໍຢ່າເຮັດສິ່ງທີ່ຊົ່ວຮ້າຍກັບຊາຍຄົນນີ້ເລີຍ”.[25]ແຕ່ຄົນເຫລົ່ານັ້ນບໍ່ຍອມ
ຟັງລາວເລີຍ, ຄົນເລວີຄົນນັ້ນຈຶ່ງຈັບເມຍນ້ອຍຂອງຕົນ ແລະພານາງອອກໄປໃຫ້ພວກເຂົາ. ພວກເຂົາກໍຈັບນາງໄປ, ຂົ່ມຂືນນາງ
ແລະເຮັດທາລຸນກັບນາງຕະຫລອດຄືນ ແລະຈົນຮຸ່ງເຊົ້າ ພວກເຂົາກໍປ່ອຍນາງໄປ.[26]ເມື່ອຮຸ່ງແຈ້ງ ຍິງສາວຄົນນັ້ນກໍກັບມາ ແລະນາງກໍລົ້ມ-
ລົງທີ່ປະຕູເຮືອນຂອງຊາຍຄົນບ່ອນທີ່ເຈົ້ານາຍຂອງຕົນພັກຢູ່, ແລະນາງນອນຢູ່ບ່ອນນັ້ນຈົນແຈ້ງສະຫວ່າງ.
[27]ເຈົ້ານາຍຂອງນາງກໍລຸກຂຶ້ນໃນຕອນເຊົ້າ, ເມື່ອເປີດປະຕູເຮືອນ ແລະຈະອອກເດີນທາງ. ລາວເຫັນເມຍນ້ອຍຂອງລາວກໍນອນຢູ່ທີ່ປະຕູເຮືອນ,
ດ້ວຍມືຂອງລາວຢຽດອອກໄປເຖິງທາງເຂົ້າປະຕູ.[28]ຄົນເລວີຈຶ່ງເວົ້າກັບນາງວ່າ, “ລຸກຂຶ້ນ ແລະພວກເຮົາໄປກັນເຖີດ”. ແຕ່ກໍບໍ່ມີຄໍາຕອບ. ລາວຈຶ່ງ
ເອົານາງຂຶ້ນຫລັງລາ, ແລະຊາຍນັ້ນອອກເດີນທາງໄປເຮືອນຂອງຕົນ.
[29]ເມື່ອຄົນເລວີມາຮອດເຮືອນຂອງລາວແລ້ວ, ລາວກໍເອົາມີດ, ແລະ ລາວໄດ້ຈັບຕົວເມຍນ້ອຍຂອງລາວ, ແລະຟັນສົບເມຍນ້ອຍ
ຕັດແຂນຕັດຂາອອກເປັນສິບສອງທ່ອນ, ແລະນໍາກັນສົ່ງໄປທົ່ວເຂດແດນອິສະຣາເອນ.[30]ທຸກຄົນທີ່ເຫັນເຫດການນີ້ກໍເວົ້າວ່າ, “ເລື່ອງຢ່າງນີ້ບໍ່ມີໃຜ
ເຄີຍໄດ້ພົບໄດ້ເຫັນຕັ້ງແຕ່ສະໄຫມຄົນອິສະຣາເອນອອກຈາກແຜ່ນດິນເອຢິບຈົນຮອດມື້ນີ້. ຈົ່ງຄິດເບິ່ງ! ແລະໃຫ້ຄໍາແນະນໍາພວກເຮົາ!
ຈົ່ງບອກພວກເຮົາວ່າຈະເຮັດແນວໃດ!”

20 1ແລ້ວຄົນອິສະຣາເອນທັງຫມົດຕັ້ງແຕ່ດານຈົນເຖິງເບເຍເອເຊບາ, ກໍໄດ້ອອກມາເປັນນໍ້າໃຈຫນຶ່ງດຽວ, ລວມທັງແຜ່ນດິນກີເລອາດກໍອອກມາ
ດ້ວຍ, ແລະ ພວກເຂົາໄດ້ປະຊຸມກັນຕໍ່ພຣະຢາເວທີ່ເມືອງມິຊະປາ. 2ພວກຫົວຫນ້າຂອງຄົນອິສະຣາເອນທັງຫມົດ, ຈາກທຸກເຜົ່າຂອງອິສະ
ຣາເອນ, ກໍໄດ້ເຂົ້າມາປະກົດຕົວໃນທີ່ປະຊຸມແຫ່ງປະຊາຊົນຂອງພຣະເຈົ້າ- ມີທະຫານຍ່າງສີ່ແສນຄົນ ຜູ້ທີ່ພ້ອມຈະສູ້ຮົບດ້ວຍດາບ.

3ໃນຂະນະທີ່ຄົນເບັນຢາມິນໄດ້ຍິນວ່າຄົນອິສະຣາເອນໄດ້ຂຶ້ນໄປເມືອງມິຊະປາ. ຄົນອິສະຣາເອນກ່າວວ່າ, “ຈົ່ງບອກພວກເຮົາວ່າ ເລື່ອງຊົ່ວຮ້າຍ
ນີ້ເກີດຂຶ້ນໄດ້ແນວໃດ”. 4ຄົນເລວີນັ້ນ, ຊຶ່ງເປັນຜົວຂອງຍິງຜູ້ທີ່ຖືກຂ້າໄດ້ຕອບວ່າ, “ຂ້ອຍເຖິງເມືອງກີເບອາໃນເຂດແດນທີ່ເປັນຂອງຄົນເບັນຢາມິນ,
ຂ້ອຍ ແລະເມຍນ້ອຍຂອງຂ້ອຍ, ໄດ້ຄ້າງຄືນໃນຢູ່ນັ້ນ.
5ໃນເວລາກາງຄືນ, ພວກຜູ້ນໍາຂອງກີເບອາ ໄດ້ບຸກເຂົ້າມາຫາຂ້ອຍ, ໄດ້ລ້ອມເຮືອນນັ້ນ ແລະຫມາຍຈະຂ້າຂ້ອຍ. ພວກ-
ເຂົາໄດ້ຈັບເອົາເມຍນ້ອຍຂອງຂ້ອຍໄປ ແລະຂົ່ມຂືນນາງ, ແລະນາງກໍຕາຍ. 6ຂ້ອຍຈຶ່ງນໍາສົບເມຍນ້ອຍຂອງຂ້ອຍກັບໄປ ແລະຟັນອອກເປັນທ່ອນໆ,
ແລະສົ່ງໄປຍັງພວກເຂົາໃນແຕ່ລະເຂດແດນທີ່ເປັນມໍລະດົກຂອງອິດສະຣາເອນ, ເພາະວ່າພວກເຂົາໄດ້ເຮັດການຊົ່ວຮ້າຍ ແລະໂກດແຄ້ນເຊັ່ນນັ້ນ
ໃນອິດສະຣາເອນ. 7ບັດນີ້, ທ່ານຄົນອິດສະຣາເອນທັງຫລາຍ, ຈົ່ງໃຫ້ຄໍາແນະນໍາ ແລະຄໍາປຶກສາ ໃນທີ່ນີ້ເຖີດ.”
8ພວກເຂົາທຸກຄົນກໍລຸກຂຶ້ນພ້ອມກັນເປັນໃຈດຽວ ແລະພວກເຂົາກ່າວວ່າ, “ບໍ່ມີໃຜໃນພວກເຮົາຈະກັບໄປເຕັນຂອງລາວ, ແລະ ບໍ່ມີໃຜໃນພວກ-
ເຮົາຈະກັບໄປເຮືອນຂອງລາວ! 9ແຕ່ບັດນີ້ ນີ້ຄືສິ່ງທີ່ພວກເຮົາຈະເຮັດກັບເມືອງກີເບອາດ: ພວກເຮົາຈະໄປໂຈມຕີກັບເມືອງນັ້ນຕາມໄດ້ຈັບສະລາກ
ໄດ້ນໍາເຮົາ.
10ພວກຮົາຈະເລືອກຄົນສິບຄົນຈາກຫນຶ່ງຮ້ອຍຄົນຈາກທົ່ວເຜົ່າອິດສະຣາເອນ, ແລະຫນຶ່ງຮ້ອຍຄົນຈາກຫນຶ່ງພັນຄົນ,
ແລະຫນຶ່ງພັນຄົນຈາກຫນຶ່ງແສນຄົນ, ເພື່ອຈັດຫາສະບຽງສໍາລັບຄົນເຫລົ່ານີ້, ດັ່ງນັ້ນ ເພື່ອເມື່ອພວກເຂົາມາເຖິງເມືອງກີເບອາດໃນເບັນຢາມິນ,
ພວກເຂົາຈະລົງໂທດຄົນເຫລົ່ານັ້ນສໍາລັບຄວາມຊົ່ວຮ້າຍທີ່ພວກເຂົາໄດ້ເຮັດໃນອິດສະຣາເອນ. 11ດັ່ງນັ້ນ ພວກທະຫານຂອງອິດສະ
ຣາເອນທັງຫມົດ ກໍໄດ້ລວມຕົວກັນອອກໄປຕໍ່ສູ້ຮົບເມືອງນັ້ນໃຈດຽວກັນ.
12ເຜົ່າຕ່າງໆຂອງຄົນອິດສະຣາເອນກໍສົ່ງຄົນເຫລົ່ານັ້ນໄປທົ່ວເຜົ່າຂອງຄົນເບັນຢາມິນທັງຫມົດ, ໄດ້ບອກວ່າ,
“ພວກເຈົ້າໄດ້ເຮັດເລື່ອງຊົ່ວຮ້າຍແບບນີ້ແນວໃດ? 13ດ້ວຍເຫດນັ້ນ, ຈົ່ງມອບຊາຍຄົນຊົ່ວຮ້າຍທັງຫລາຍນັ້ນໃນເມືອງກີເບອາດມາໃຫ້ເຮົາ,
ເພື່ອພວກເຮົາຂ້າພວກເຂົາຖິ້ມ ແລະ ເພື່ອພວກເຮົາເອົາຄວາມຊົ່ວອອກໄປຈາກຄົນອິດສະຣາເອນ”. ແຕ່ຄົນເບັນຢາມິນບໍ່ຍອມຟັງສຽງຄົນອິດສ
ະຣາເອນພີ່ນ້ອງຂອງຕົນ. 14ຈາກນັ້ນຄົນເບັນຢາມິນກໍອອກມາຈາກບັນດາຫົວເມືອງຕ່າງໆມາລວມຕົວກັນທີ່ເມືອກີເບອາດ ເພື່ອພ້ອມ
ກັນທີ່ຈະສູ້ຮົບກັບຄົນອິດສະຣາເອນ.
15ຄົນເບັນຢາມິນໄດ່ພາກັນຈາກເມືອງຕ່າງໆຂອງພວກເຂົາ ເພື່ອທີ່ຈະສູ້ຮົບໃນວັນນັ້ນ ມີທະ-
ຫານຈໍານວນສອງຫມື່ນຫົກພັນຄົນທີ່ຊໍານານໃນການສູ້ຮົບດ້ວຍດາບ. ນອກຈາກນັ້ນ, ຍັງມີຄົນອີກເຈັດຮ້ອຍ
ຄົນຂອງພວກເຂົາຖືກເລືອກຈາກເມືອງກີເບອາ. 16ໃນຈໍານວນທະຫານທັງຫມົດນີ້ ມີເຈັດຮ້ອຍຄົນທີ່ຖືກເລືອກແລ້ວທີ່ຖະຫນັດມືຊ້າຍ.
ແຕ່ລະຄົນສາມາດເອົາຍິງກະຖຸນໃສ່ກ້ອນຫີນໃຫ້ຖືກເສັ້ນຜົມໄດ້ບໍ່ພາດເລີຍ.
17ຄົນອິສະຣາເອນທີ່ບໍ່ນັບຄົນເບັນຢາມິນ, ຈໍານວນສີ່ແສນຄົນ ທີ່ຊໍານານໃນການສູ້ຮົບດ້ວຍດາບ. ຄົນທັງຫມົດເຫລົ່ານັ້ນລ້ວນແຕ່ເປັນັກຮົບ.
18ຄົນອິສະຣາເອນກໍລຸກຂຶ້ນ, ຂຶ້ນໄປຍັງເມືອງເບນເອນ, ແລະທູນຂໍຄໍາປຶກສາຈາກພຣະຢາເວ. ພວກເຂົາທູນຖາມວ່າ,“ຜູ້ໃດຈະໄປສູ້ຮົບກັບຄົນ
ເບັນຢາມິນເພື່ອພວກຂ້ານ້ອຍກ່ອນ?” ພຣະຢາເວຊົງກ່າວກວ່າ, “ຢູດາຈະໄປສູ້ຮົບກ່ອນ”
19ຄົນອິດສະຣາເອນໄດ້ລຸກຂຶ້ນແຕ່ເຊົ້າ ແລະພວກເຂົາຍ້າຍຄ້າຍຂອງພວກເຂົາໄປໃກ້ເມືອງກີເບອາ 20ຄົນອິດສະຣາເອນອອກໄປສູ້ຮົບກັບຄົນເບັນ-
ຢາມິນ. ພວກເຂົາໄດ້ຕຽມທະຫານເພື່ອຕໍ່ສູ້ຮົບກັບຄົນເຫລົ່ານັ້ນທີ່ເມືອງກີເບອາ. 21ຄົນເບັນຢາມິນອອກມາຈາກເມືອງກີເບອາ,
ແລະພວກເຂົາໄດ້ຂ້າທະຫານຂອງຄົນອິດສະຣາເອນໄປສອງຫມື່ນຄົນໃນມື້ນັ້ນ.
22ແຕ່ຄົນອິດສະຣາເອນໄດ້ເສີມກໍາລັງກັນ ແລະພວກເຂົາຈັດແນວຮົບໃນທີ່ເດີມທີ່ພວກເຂົາໄດ້ວາງຕໍາແຫນ່ງໄວ້ໃນວັນທໍາອິດ. 23ຈາກນັ້ນຄົນອິດສ
ະຣາເອນກໍຂຶ້ນໄປ ແລະພວກເຂົາໄດ້ຮ້ອງໄຫ້ຄໍາຄວນຕໍ່ຫນ້າພຣະຢາເວຈົນຮອດຕອນແລງ, ແລະ ພວກເຂົາໄດ້ສະແຫວງຫາການນີ້ຈາກພຣະ-
ຢາເວ. ພວກເຂົາໄດ້ທູນຖາມວ່າ “ພວກຂ້ານ້ອຍຄວນທີ່ຈະອອກໄປສູ້ຮົບກັບຄົນເບັນຢາມິນພີ່ນ້ອງຂອງພວກຂ້ານ້ອຍອີກຫລືບໍ່?”
ພຣະຢາເວໄດ້ຊົງກ່າວວ່າ “ຈົ່ງໄປສູ້ຮົບກັບພວກເຂົາເຖີດ!”
24ດັ່ງນັ້ນ ຄົນອິດສະຣາເອນຈຶ່ງໄດ້ໄປສູ້ຮົບກັບພວກທະຫານຂອງເບັນຢາມິນໃນມື້ທີສອງ. 25ແລະໃນມື້ທີສອງນັ້ນ, ຄົນເບັນຢາມິນກໍຍົກທັບອອກໄປ
ຈາກກີເບອາ ແລະພວກເຂົາໄດ້ຂ້າຄົນອິດສະຣາເອນໄປຫນຶ່ງຫມື່ນແປດພັນຄົນ. ຊຶ່ງທຸກຄົນລ້ວນເປັນຄົນຊໍານານໃນການສູ້ຮົບດ້ວຍດາບ.
26ແລ້ວພວກທະຫານທັງຫມົດຂອງອິດສະຣາເອນ ແລະ ປະຊາຊົນທັງຫມົດ ຈຶ່ງໄດ້ຂຶ້ນໄປທີ່ເມືອງເບັດເອັນ ແລະຮ້ອງໄຫ້ຄໍາຄວນ,
ແລະທີ່ນັ້ນພວກເຂົານັ່ງເຝົ້າຕໍ່ຫນ້າພຣະຢາເວ, ແລະ ພວກເຂົາໄດ້ອົດອາຫານຈົນຮອດຕອນແລງ ແລະ ຖວາຍເຄື່ອງເຜົາບູຊາ ແລະ ເຄື່ອງບູຊາ
ເພື່ອຄວາມສາມັກຄີທໍາຕໍ່ຫນ້າພຣະຢາເວ.
27ຄົນອິດສະຣາເອນຈຶ່ງທູນຖາມພຣະຢາເວ- ເພາະວ່າຫີບພັນທະສັນຍາຂອງພຣະເຈົ້າໄດ້ຢູ່ບ່ອນທີ່ນັ້ນໃນສະໄຫມນັ້ນ. 28ແລະຟີເນຫັດລູກ-
ຊາຍຂອງເອເລອາຊາ, ຜູ້ເປັນລູກຊາຍຂອງອາໂຣນກໍາລັງຮັບໃຊ້ຢູ່ຫນ້າຫີບນັ້ນໃນສະໄຫມນັ້ນ- ພວກເຂົາທູນຖາມວ່າ “ພວກຂ້າ
ນ້ອຍຄວນຈະອອກໄປສູ້ຮົບກັບຄົນເບັນຢາມິນພີ່ນ້ອງຂອງພວກຂ້ານ້ອຍອີກຄັ້ງຫລືວ່າຄວນຈະຢຸດ?”ພຣະຢາເວຊົງກ່າວວ່າ, “ຈົ່ງສູ້ຮົບເຖີດ
ເພາະວ່າມື້ອື່ນນີ້ ເຮົາຈະຊ່ວຍໃຫ້ພວກເຈົ້າເອົາຊະນະພວກເຂົາ."
29ດັ່ງນັ້ນ ຄົນອິດສະຣາເອນຈຶ່ງຈັດຄົນຊ້ອນໄວ້ອ້ອມເມືອງກີເບອາ. 30ຄົນອິດສະຣາເອນກໍຂຶ້ນໄປສູ້ຮົບກັບຄົນເບັນຢາມິນໃນວັນທີສາມ,
ແລະພວກເຂົາຈັດຕຽມທະຫານຕໍ່ສູ້ເມືອງກີເບອາເຫມືອນກັບທີ່ພວກເຂົາເຮັດຄາວກ່ອນ.
31ຄົນເບັນຢາມິນກໍໄດ້ອອກໄປແລະສູ້ຮົບກັບຄົນເຫລົ່ານັ້ນ, ແລ້ວພວກເຂົາກໍຖືກຫລອກລວງໃຫ້ຫ່າງອອກໄປຈາກຕົວເມືອງ.ພວກເຂົາກໍເລີ່ມຂ້າ-
ຟັນປະຊາຊົນຈໍານວນຫນຶ່ງ. ມີຄົນອິດສະຣາເອນປະມານສາມສິບຄົນທີ່ຕາຍຕາມທົ່ງນາ ແລະເສັ້ນທາງ. ຫນຶ່ງໃນເສັ້ນທາງໄປຍັງພຣະວິຫານ
ຂອງພຣະຢາເວ: ແລະ ອີກເສັ້ນຫນຶ່ງໄປເມືອງກີເບອາ.
32ແລ້ວຄົນເບັນຢາມິນຈຶ່ງເວົ້າກັນວ່າ, “ພວກເຂົາພ່າຍແພ້ ແລະພວກເຂົາກໍາລັງແລ່ນຫນີຈາກພວກເຮົາຄືກັນກັບຄາວກ່ອນ”. ແຕ່ຄົນອິດສະ
ຣາເອນເວົ້າວ່າ, “ໃຫ້ພວກເຮົາແລ່ນຖອຍອອກມາ ແລະລໍຖ້າພວກເຂົາອອກມາຫ່າງຈາກເມືອງໄປຮອດຖະຫນົນນັ້ນ”. 33ຄົນອິດສະຣາເອນທັງມົດ


generated on Tue Jun 17 19:01:42 2025

ກໍລຸກອອກຈາກບ່ອນຂອງຕົນ ແລະຈັດແນວຮົບຂອງຕົນທີ່ບາອານ-ຕາມາ. ແລ້ວພວກທະຫານຂອງອິດສະຣາເອນທີ່ຄອຍຖ້າຊຸ້ມຢູ່ກໍອອກຈາກ
ບ່ອນຂອງຕົນຈາກເມືອງມາຣາ-ເກບາ.
[34]ມີຄົນອິດສະຣາເອນທີ່ຖືກຄັດເລືອກມາຈາກຄົນອິດສະຣາເອນທັງຫມົດຫນຶ່ງຫມື່ນຄົນໄດ້ອອກມາສູ້ຮົບກັບເມືອງກິເບອາ ແລະ ການກໍາ-
ລັງຕໍ່ສູ້ຢ່າງດຸເດືອດ, ແຕ່ຄົນເບັນຢາມິນບໍ່ຮູ້ວ່າຄວາມໂຫດຮ້າຍກໍາລັງໃກ້ເຂົ້າມາເຖິງຕົນແລ້ວ.[35]ພຣະຢາເວໃຫ້ຄົນເບັນຢາມິນພ່າຍແພ້ຄົນອິດສະ
ຣາເອນ. ໃນມື້ນັ້ນ, ພວກທະຫານ ຂອງອິດສະຣາເອນໄດ້ຂ້າຄົນເບັນຢາມິນສອງຫມື່ນຫ້າພັນຫນຶ່ງຮ້ອຍຄົນ ຄົນຕາຍເຫລົ່າ
ນີ້ລ້ວນແຕ່ຊໍານານການສູ້ຮົບດ້ວຍດາບ.
[36]ດັ່ງນັ້ນ ພວກທະຫານເບັນຢາມິນຈຶ່ງເຫັນວ່າ ພວກເຂົາພ່າຍແພ້ແລ້ວ. ຄົນອິດສະຣາເອນທໍາທ່າຖອຍຫນີຕໍ່ຄົນເບັນຢາມິນ, ເພາະວ່າພວກເຂົາ
ວາງໃຈຄົນເຫລົ່ານັ້ນທີ່ໄດ້ຊຸ້ມຢູ່ອ້ອມເມືອງກິເບອາ.[37]ແລ້ວຄົນທີ່ຊຸ້ມຢູ່ກໍລຸກຂຶ້ນ, ແລະຮີບ, ແລະພວກເຂົາໄດ້ບຸກຂຶ້ນເຂົ້າໄປໃນເມືອງກິເບອາ
ແລະພວກເຂົາໄດ້ຂ້າທຸກຄົນທີ່ອາໄສຢູ່ໃນເມືອງນັ້ນດ້ວຍດາບ.[38]ຄົນອິດສະຣາເອນ ກັບພວກຄົນທີ່ຊຸ້ມຢູ່ ໄດ້ນັດກັນໃນການໃຫ້ສັນຍານວ່າ ຖ້າ
ເຫັນຄວັນກ້ອນໃຫຍ່ພຸ່ງຂຶ້ນມາຈາກໃນເມືອງນັ້ນ.
[39]ເມື່ອສົ່ງສັນຍານໄປແລ້ວ ພວກທະຫານຂອງອິດສະຣາເອນກໍຫັນກັບມາຈາກການສູ້ຮົບ. ຄົນເບັນຢາມິນໄດ້ເລີ່ມໂຈມຕີ ແລະພວກເຂົາຂ້າຄົນ
ອິດສະຣາເອນໄດ້ສາມສິບຄົນ, ພວກເຂົາກໍເວົ້າວ່າ, “ແນ່ນອນວ່າພວກເຂົາໄດ້ພ່າຍແພ້ຕໍ່ຫນ້າພວກເຮົາແລ້ວ,
ເຫມືອນຢ່າງການສູ້ຮົບໃນຄັ້ງກ່ອນ”.
[40]ແຕ່ຄວັນໄຟລຸກພຸ່ງຂຶ້ນມາຈາກໃນເມືອງນັ້ນ, ຄົນເບັນຢາມິນຫັນມາ ແລະ ເຫັນຄວັນໄຟໄດ້ພຸ່ງຂຶ້ນສູ່ທ້ອງຟ້າຈາກທົ່ວເມືອງນັ້ນ.[41]ແລ້ວຄົນອິດສະ
ຣາເອນກໍໄດ້ຫັນກັບມາສູ້ຮົບກັບພວກເຂົາ. ຄົນເບັນຢາມິນຢ້ານກວ່າຫລາຍ, ເພາະວ່າພວກເຂົາເຫັນວ່າຄວາມໂຫດຮ້າຍມາເຫນືອພວກເຂົາ
ແລ້ວ.
[42]ດັ່ງນັ້ນ ພວກເຂົາຈຶ່ງແລ່ນຫນີໄປຈາກຄົນອິດສະຣາເອນ, ຫນີເຂົ້າໄປທາງຖິ່ນແຫ້ງແລ້ງກັນດານ. ແຕ່ສົງຄາມກໍຍັງຕາມພວກເຂົາໄປຢ່າງຫນັກ.
ພວກທະຫານຂອງອິດສະຣາເອນ ໄດ້ອອກມາຈາກເມືອງເຫລົ່ານັ້ນ ແລະ ໄດ້ຂ້າພວກເຂົາໃນທີ່ບ່ອນພວກເຂົາຢືນຢູ່.
[43]ພວກເຂົາໄດ້ລ້ອມຄົນເບັນຢາມິນ, ຂັບໄລ່ໄປ, ແລະໄດ້ໄລ່ພວກເຂົາໄປ, ແລະຢຽບຢໍ່າພວກເຂົາລົງໄປທີ່ໂນອາ.
ຕະຫລອດທາງໄປທິດຕາເວັນຂອງເມືອງກິເບອາ.[44]ຄົນເບັນຢາມິນລົ້ມຕາຍຫນຶ່ງຫມື່ນແປດພັນຄົນ, ຊຶ່ງທຸກ
ຄົນລ້ວນແຕ່ເປັນນັບຮົບທີ່ມີຊື່ສຽງໃນສະຫນາມຮົບ.
[45]ພວກເຂົາໄດ້ກັບ ແລະ ຫນີໄປທາງຖິ່ນແຫ້ງແລ້ງກັນດານຮອດແຜ່ນຫີນຣິມໂມນ. ຄົນອິດສະຣາເອນ ຂ້າຄົນເບັນຢາມິນຫລາຍກວ່າຫ້າພັນ
ຄົນຕາມຖະຫນົນນັ້ນ. ພວກເຂົາຍັງຄົງໄລ່ຕາມພວກເຂົາ, ແລະໄລ່ຕາມໄປໃກ້ເຖິງກີໂດມ, ແລະພວກເຂົາຂ້າຄົນຫລາຍກວ່າສອງພັນຄົນ.[46]ຄົນ
ເບັນຢາມິນທັງຫມົດທີ່ລົ້ມຕາຍໃນມື້ນັ້ນ ສອງຫມື່ນຫ້າພັນຄົນ-ຊຶ່ງເປັນຄົນທີ່ຊໍານານການຕໍ່ສູ້ດ້ວຍດາບ;
ພວກເຂົາທຸກຄົນລ້ວນມີຊື່ສຽງໃນການສູ້ຮົບໃນສະຫນາມຮົບ.
[47]ແຕ່ມີທະຫານຫົກຮ້ອຍຄົນໄດ້ຫັນກັບ ແລະ ຫນີໄປໃນຖິ່ນແຫ້ງແລ້ງກັນດານຮອດແຜ່ນຫີນຣິມໂມນ. ພວກເຂົາໄດ້ອາໄສຢູ່ທີ່ແຜ່ນຫີນຣິມ-
ໂມນເປັນເວລາສີ່ເດືອນ.[48]ພວກທະຫານຂອງອິດສະຣາເອນກໍກັບມາສູ້ຮົບກັບຄົນເບັນຢາມິນອີກ ແລະໄດ້ໂຈມຕີ ແລະຂ້າພວກເຂົາ- ທັງເມືອງ,
ຝູງສັດ ແລະ ບັນດາສິ່ງຂອງທີ່ພວກເຂົາພົບເຫັນ. ພວກເຂົາຍັງໄດ້ເອົາໄຟເຜົາທຸກຫົວເມືອງຕາມເສັ້ນທາງຂອງພວກເຂົາດ້ວຍ.

 generated on Tue Jun 17 19:01:42 2025

## 21

1ໃນຕອນນີ້ ຄົນອິສະຣາເອນໄດ້ໃຫ້ຄຳຫມັ້ນສັນຍາກັນທີ່ເມືອງມິຊະປາວ່າ,“ບໍ່ມີໃຜໃນພວກເຮົາທີ່ຈະໃຫ້ລູກສາວຂອງຕົນແຕ່ງງານກັບຄົນເບັນ-
ຢາມິນ”.2ເມື່ອປະຊາຊົນກໍໄດ້ໄປຍັງເມືອງເບັດເອັນ ແລະ ນັ່ງຢູ່ຕໍ່ຫນ້າພຣະຢາເວຈົນຮອດຕອນແລງ ແລະ ພວກເຂົາທັງຫລາຍກໍຮ້ອງໄຫ້ຄໍ່າ
ຄວນ.3ພວກເຂົາຮ້ອງທູນວ່າ, “ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ເປັນຫຍັງເຫດການນີ້ຈຶ່ງເກີດຂຶ້ນໃນອິສະຣາເອນ,
ຊຶ່ງເຜົ່າຫນຶ່ງຂອງບັນດາເຜົ່າຂອງພວກເຮົາຈະຂາດຫາຍໄປໃນວັນນີ້.”

4ໃນມື້ຕໍ່ມາປະຊາຊົນໄດ້ລຸກຂຶ້ນແຕ່ເຊົ້າໆ ແລະ ສ້າງແທ່ນບູຊາແທ່ນຫນຶ່ງ ຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ.5ແລະ
ຄົນອິດສະຣາເອນໄດ້ກ່າວວ່າ, “ເຜົ່າໃດໃນບັນດາເຜົ່າຂອງອິສະຣາເອນທີ່ບໍ່ໄດ້ຂຶ້ນມາຊຸມນຸມຕໍ່ພຣະຢາເວ?” ເພາະວ່າພວກເຂົາ
ໄດ້ໃຫ້ຄຳສັນຍາທີ່ສຳຄັນກ່ຽວກັບຄົນໃດກໍຕາມທີ່ບໍ່ມາຊຸມນຸມຕໍ່ພຣະຢາເວຢູ່ມິດຊະປາ, ພວກເຂົາກ່າວວ່າ “ຜູ້ນັ້ນຈະ
ຖືກປະຫານຊີວິດຢ່າງແນ່ນອນ."
6ຄົນອິສະຣາເອນມີຄວາມເມດຕາສົງສານຕໍ່ຄົນເບັນຢາມິນພີ່ນ້ອງຂອງຕົນ ແລະ ພວກເຂົາໄດ້ກ່າວວ່າ “ໃນມື້ນີ້ເຜົ່າຫນຶ່ງໄດ້ຖືກຕັດຂາດຈາກອິສ
ະຣາເອນແລ້ວ.7ໃຜຈະຫາເມຍໃຫ້ກັບຄົນເຫລົ່ານັ້ນທີ່ເຫລືອຢູ່ ເນື່ອງຈາກພວກເຮົາໄດ້ໃຫ້ຄຳສັນຍາຕໍ່ພຣະຢາເວວ່າ ພວກເຮົາຈະບໍ່ຍອມ
ໃຫ້ຄົນໃດໃນພວກເຂົາແຕ່ງງານກັບລູກສາວຂອງພວກເຮົາ?”
8ພວກເຂົາຖາມຂຶ້ນວ່າ, “ເຜົ່າໃດໃນບັນາເຜົ່າຂອງອິສະຣາເອນທີ່ບໍ່ໄດ້ຂຶ້ນມາເຝົ້າພຣະຢາເວທີ່ມິຊະປາ?” ຊຶ່ງໄດ້ພົບວ່າບໍ່ມີຄົນໃດຈາກຢາເບັດ
ກີເລອາດມາຊຸມນຸມເລີຍ.9ເພາະວ່າເມື່ອໄດ້ຈັດວາງປະຊາຊົນໃຫ້ເປັນລະບຽບແລ້ວ, ເບິ່ງແມ, ບໍ່ມີຊາວເມືອງຢາເບັດກີເລອາດຢູ່ບ່ອນນັ້ນເລີຍ.
10ດັ່ງນັ້ນ ຊຸມນຸມຊົນຈຶ່ງໄດ້ສົ່ງທະຫານຜູ້ກ້າຫານທີ່ສຸດຂອງພວກເຂົາອອກໄປຫນຶ່ງຫມື່ນສອງພັນຄົນ ພ້ອມກັບຄຳສັ່ງໃຫ້ໄປຍັງຢາເບັດກີເລອາດ
ແລະໂຈມຕີພວກເຂົາ ແລະ ຂ້າພວກເຂົາ ທັງຜູ້ຍິງ ແລະ ເດັກນ້ອຍ.
11ຈົ່ງເຮັດສິ່ງນີ້: ພວກເຈົ້າຕ້ອງຂ້າຜູ້ຊາຍ ແລະຜູ້ຍິງທຸກຄົນທີ່ໄດ້ຫລັບນອນກັບຜູ້ຊາຍແລ້ວ."12ຄົນເຫລົ່ານັ້ນ ໄດ້ພົບໃນຫມູ່ຄົນທີ່ອາໄສຢູ່ຢາ-
ເບັດກີເລອາດ ມີພວກຍິງສາວຜູ້ທີ່ຍັງບໍ່ເຄີຍຮ່ວມຫລັບນອນກັບຊາຍໃດໆເລີຍ ສີ່ຮ້ອຍຄົນ ແລະພວກເຂົາຈຶ່ງພາຍິງເຫລົ່ານັ້ນມາທີ່ຄ້າຍຊີໂລ, ຊຶ່ງ
ຢູ່ໃນແຜ່ນດິນການາອານ.
13ຊຸມນຸມຊົນທັງຫມົດ ກໍສົ່ງຂ່າວອອກໄປ ແລະໄດ້ບອກຄົນເບັນຢາມິນຊຶ່ງຢູ່ແຜ່ນຫີນຣິມໂມນວ່າ ຄົນອິສະຣາເອນໄດ້ສະງົບເສິກແລ້ວ.
14ຄົນເບັນຢາມິນໄດ້ກັບມາໃນເວລານັ້ນ ແລະພວກເຂົາກໍມອບພວກຍິງສາວຊາວຢາເບັດກີເລອາດ, ແຕ່ກໍບໍ່ພໍສາວຍິງສຳລັບພວກເຂົາທັງຫມົດ.
15ປະຊາຊົນກໍໄດ້ເສຍໃຈກັບເຫດການທີ່ໄດ້ເກີດຂຶ້ນກັບຄົນເບັນຢາມິນ, ເພາະວ່າພຣະຢາເວ ຊົງເຮັດໃຫ້ເກີດການແບ່ງແຍກລະຫວ່າງເຜົ່າຂອງອິ
ສະຣາເອນ.
16ພວກຜູ້ນຳຂອງຊຸມນຸມຊົນນັ້ນໄດ້ກ່າວວ່າ, “ພວກເຮົາຈະຈັດຫາເມຍໃຫ້ກັບຄົນເບັນຢາມິນຜູ້ທີ່ເຫລືອຢູ່ແນວໃດ,
ເພາະວ່າພວກຜູ້ຍິງເບັນຢາມິນຖືກຂ້າຕາຍຫມົດແລ້ວ.17ພວກເຂົາໄດ້ກ່າວວ່າ, “ຕ້ອງມີມໍລະດົກໃຫ້ແກ່ຄົນເບັນຢາມິນທີ່ລອດຕາຍ, ເພື່ອ
ບໍ່ໃຫ້ເຜົ່າຫນຶ່ງຖືກທຳລາຍຈາກອິສະຣາເອນ.
18ພວກເຮົາບໍ່ສາມາດຍົກບັນດາລູກສາວຂອງພວກເຮົາໃຫ້ເປັນເມຍພວກເຂົາ, ເພາະວ່າຄົນອິສະຣາເອນໄດ້ໃຫ້ຄຳສັນຍາໄວ້ວ່າ, “ຜູ້ໃດ
ຍົກລູກສາວໃຫ້ເປັນເມຍແກ່ເບັນຢາມິນ ຈົ່ງຖືກສາບແຊ່ງ”.19ດັ່ງນັ້ນ ພວກເຂົາຈຶ່ງກ່າວວ່າ, “ ພວກເຈົ້າຮູ້ວ່າ ງານລ້ຽງເທສະການຖວາຍ
ພຣະຢາເວທຸກໆປີຢູ່ຊີໂລ (ທີ່ຊຶ່ງຢູ່ເຫນືອເບັດເອັນ, ທາງທິດຕາເວັນອອກຂອງຖະຫນົນຂຶ້ນຈາກເມືອງເບັດເອັນຮອດຊີເຄມ ແລະ ຢູ່ທາງທິດໃຕ້
ຂອງເລໂບນາ)”
20ພວກເຂົາໄດ້ສັ່ງຄົນເບັນຢາມິນ, ແລະກ່າວວ່າ, “ຈົ່ງໄປຊຸ້ມຄອຍຢູ່ໃນສວນອະງຸ່ນ.21ລໍຖ້າເຝົ້າເບິ່ງຢູ່ ເມື່ອພວກລູກສາວຊາວຊີໂລອອກມາເຕັ້ນ-
ລຳ, ແລ້ວຟ້າວແລ່ນອອກມາຈາກສວນອະງຸ່ນ ແລະພວກເຈົ້າແຕ່ລະຄົນກໍລັກເອົາພວກລູກສາວຊາວຊີໂລມາເປັນເມຍ, ແລ້ວກັບໄປຍັງແຜ່ນດິນ
ເບັນຢາມິນ.
22ເມື່ອພໍ່ ຫລືພີ່ນ້ອງຂອງພວກນາງເຫລົ່ານັ້ນມາຮ້ອງທຸກຕໍ່ພວກເຮົາ, ພວກເຮົາຈະບອກພວກເຂົາວ່າ, ‘ຂໍຈົ່ງສະແດງກະລຸນນາຕໍ່ພວກເຮົາເຖີດ!
ຂໍໂຜດຍອມໃຫ້ພວກນາງຢູ່ ເພາະພວກເຂົາບໍ່ໄດ້ໃຫ້ເມຍແກ່ແຕ່ລະຄົນໃນເວລາສົງຄາມ. ເນື່ອງຈາກພວກທ່ານ
ບໍ່ໄດ້ມອບບັນດາລູກສາວຂອງພວກທ່ານໃຫ້ແກ່ພວກເຂົາ ພວກທ່ານກໍຈະບໍ່ມີຄວາມຜິດ.’”
23ຄົນເບັນຢາມິນກໍເຮັດເຊັ່ນນັ້ນ. ພວກເຂົາກໍໄດ້ເມຍໄປຕາມຈຳນວນພວກເຂົາຕ້ອງການຈາກບັນດາຍິງສາວທີ່ກຳລັງເຕັ້ນລຳ
ແລະພວກເຂົາໄດ້ເອົາຕົວພວກນາງໄປເປັນເມຍຂອງພວກເຂົາ. ພວກເຂົາກໍກັບໄປຢູ່ໃນທີ່ດິນມໍລະດົກຂອງພວກເຂົາ. ພວກເຂົາໄດ້ສ້າງເມືອງຂຶ້ນ
ໃຫມ່ ແລະອາໄສຢູ່ໃນບ່ອນນັ້ນ.24ແລ້ວຄົນອິດສະຣາເອນ ກໍອອກໄປຈາກບ່ອນນັ້ນ ແລະກັບບ້ານ, ຕ່າງຄົນກໍໄປຍັງເຜົ່າ ແລະຕະກູນຂອງຕົນ,
ແລະຕ່າງກໍກັບໄປຍັງທີ່ມໍລະດົກຂອງຕົນ.
25ໃນສະໄຫມນັ້ນ ບໍ່ມີກະສັດໃນອິສະຣາເອນ. ທຸກຄົນເຮັດໃນສິ່ງຖືກຕ້ອງທີ່ຕົນເອງເຫັນດີ.

# ນາງຣຸດ

1 1ໃນສະໄຫມເມື່ອຜູ້ພິພາກສາຢູ່ນັ້ນມີການຂາດແຄນອາຫານເກີດຂຶ້ນໃນແຜ່ນດິນ, ແລະມີຊາຍຄົນຫນຶ່ງຈາກເມືອງເບັດເລເຮັມ,
ໃນເຂດຢູດາຍ ໄດ້ເດີນທາງໄປທີ່ແຜ່ນດິນໂມອາບພ້ອມກັບເມຍ ແລະ ລູກຊາຍສອງຄົນຂອງເຂົາ.2ຊາຍຄົນນີ້ຊື່ວ່າເອລີເມເລັກ, ແລະ
ເມຍຂອງເຂົາຊື່ວ່ານາງນາໂອມີ. ແລະ ລູກຊາຍທັງສອງຂອງເຂົາຊື່ວ່າ ມາໂລນ ແລະ ກີລີໂອນ, ພວກເຂົາເປັນຄົນເອລີເມເລັກ,
ເມືອງເບັດເລເຮັມ, ໃນເຂດຢູດາຍ. ພວກເຂົາມາເຖິງແຜ່ນດິນໂມອາບ ແລະ ໄດ້ອາໄສຢູ່ທີ່ນັ້ນ.

3ແລ້ວເອລີເມເລັກ, ຜູ້ເປັນຜົວຂອງນາງນາໂອມີກໍໄດ້ເສຍຊີວິດ, ແລະ ນາງຖືກຖິ້ມໃຫ້ຢູ່ກັບລູກຊາຍທັງສອງຄົນ.
4ບຸດເຫລົ່ານີ້ໄດ້ຍິງໂມອາບເປັນເມຍ; ຄົນຫນຶ່ງຊື່ວ່າ ນາງໂອປາ, ແລະ ອີກຄົນຫນຶ່ງຊື່ວ່ານາງຣຸດ.

 generated on Tue Jun 17 19:01:42 2025

ພວກເຂົາອາໄສຢູ່ທີ່ນັ້ນເປັນເວລາປະມານສິບປີ.[5]ແລ້ວທັງມາໂລນ ແລະກີລີໂອນກໍເສຍຊີວິດ, ນາງນາໂອມີຈຶ່ງຢູ່ໂດຍບໍ່ມີຜົວ
ແລະລູກທັງສອງຄົນຂອງນາງ.
[6]ແລ້ວນາງນາໂອມີຈຶ່ງຕັດສິນໃຈອອກຈາກໂມອາບ ພ້ອມກັບລູກໄພ້ທັງສອງຂອງນາງ ແລະກັບໄປຍັງຢູດາຍ ເພາະນາງໄດ້ຍິນ
ຂະນະຢູ່ໃນແຂວງຂອງໂມອາບ ວ່າພຣະຢາເວໄດ້ຊ່ວຍເຫລືອປະຊາກອນຂອງພຣະອົງໃນຍາມຕ້ອງການ ແລະ
ປຣະທານອາຫານໃຫ້ແກ່ພວກເຂົາ.[7]ດັ່ງນັ້ນນາງຈຶ່ງອອກຈາກສະຖານທີ່ ຊຶ່ງນາງເຄີຍໄດ້ອາໄສຢູ່ພ້ອມກັບລູກໄພ້ທັງສອງຄົນຂອງນາງ,
ແລະພວກນາງຈຶ່ງຍ່າງລົງໄປຕາມຫົນທາງ ເພື່ອກັບໄປຍັງແຜ່ນດິນຢູດາຍ.
[8]ນາງນາໂອມີໄດ້ເວົ້າກັບລູກໄພ້ທັງສອງຄົນວ່າ, "ໄປ, ກັບໄປ, ພວກເຈົ້າແຕ່ລະຄົນຈົ່ງກັບໄປຍັງບ້ານແມ່ຂອງພວກເຈົ້າເຖີດ.
ຂໍພຣະຢາເວສຳແດງຄວາມກະຣຸນາຕໍ່ພວກເຈົ້າ, ເຫມືອນຢ່າງທີ່ພວກເຈົ້າໄດ້ສຳແດງຄວາມກະຣຸນາຕໍ່ຜູ້ທີ່ຕາຍໄປແລະ ຕໍ່ຂ້ອຍດ້ວຍ.
[9]ຂໍໃຫ້ອົງພຣະຜູ້ເປັນເຈົ້າປຣະທານການພັກສະຫງົບ, ໃຫ້ແກ່ພວກເຈົ້າໃນບ້ານຂອງຄອບຄົວໃຫມ່ຂອງພວກເຈົ້າແຕ່ລະຄົນເຖີດ.
"ແລ້ວນາງນາໂອມີຈຶ່ງຈູບລາລູກໄພ້ທັງສອງ, ແລະ ພວກນາງກໍເປັ່ງສຽງຮ້ອງໄຫ້.[10]ພວກນາງເວົ້າກັບນາງນາໂອມີວ່າ, "ຢ່າເລີຍ!
ພວກເຮົາຈະກັບໄປພ້ອມກັບທ່ານໄປຍັງຊົນຊາດຂອງທ່ານ."
[11]ແຕ່ນາງນາໂອມີເວົ້າວ່າ, "ຈົ່ງກັບໄປເຖີດ, ລູກສາວຂອງເຮົາເອີຍ! ເປັນຫຍັງພວກເຈົ້າຈຶ່ງຈະໄປກັບຂ້ອຍ?
ຂ້ອຍຈະຍັງມີລູກຊາຍໃນຄັນເພື່ອຈະມາເປັນຜົວຂອງພວກເຈົ້າໄດ້ອີກຢ່າງນັ້ນບໍ?[12]ຈົ່ງກັບໄປເຖີດ, ລູກເອີຍ, ໄປຕາມທາງຂອງພວກເຈົ້າຖ້ອນ,
ເພາະຂ້ອຍເອງກໍແກ່ເກີນກວ່າທີ່ຈະມີຜົວໄດ້ອີກແລ້ວ. ຖ້າຫາກຂ້ອຍບອກວ່າ, 'ຂ້ອຍຫວັງວ່າ ຂ້ອຍຈະໄດ້ຜົວຄົນຫນຶ່ງໃນຄືນນີ້,' ແລະ
ໃຫ້ກຳເນີດລູກຊາຍທັງຫລາຍ,[13]ແລ້ວພວກເຈົ້າຈະລໍຖ້າຈົນກວ່າພວກເຂົາຈະເຕີບໂຕຢ່າງນັ້ນບໍ? ພວກເຈົ້າຈະລໍຖ້າ
ແລະບໍ່ແຕ່ງງານກັບຊາຍຄົນໃຫມ່ເວລານີ້ບໍ? ຢ່າເລີຍ, ລູກສາວເອີຍ! ມັນຈະເປັນຄວາມໂສກເສົ້າຢ່າງໃຫຍ່ຫລວງສຳລັບຂ້ອຍ,
ຫລາຍກວ່າເປັນຄວາມໂສກເສົ້າໃຫ້ແກ່ພວກເຈົ້າ, ເພາະພຣະຫັດຂອງພຣະຢາເວໄດ້ຫັນມາຕໍ່ສູ້ຂ້ອຍແລ້ວ."
[14]ແລ້ວບັນດາລູກໄພ້ຂອງນາງກໍເປັ່ງສຽງຂຶ້ນ ແລະ ຮ້ອງໄຫ້ອີກຄັ້ງຫນຶ່ງ. ໂອປາໄດ້ຈູບລາແມ່ຍ່າຂອງນາງ,
ແຕ່ນາງຣຸດຍັງຄົງກອດນາງເອົາໄວ້ແໜ້ນ.[15]ນາງນາໂອມີເວົ້າວ່າ, "ຟັງເດີ້, ເອື້ອຍໄພ້ຂອງເຈົ້າໄດ້ກັບໄປຫາຊົນຊາດ
ແລະພຣະທັງຫລາຍຂອງເຂົາແລ້ວ. ເຈົ້າຈົ່ງກັບໄປພ້ອມກັນກັບເອື້ອຍໄພ້ຂອງເຈົ້າເຖີດ."
[16]ແຕ່ນາງຣຸດເວົ້າວ່າ, "ຂໍຢ່າພາກຂ້ານ້ອຍໄປຈາກແມ່ເລີຍ, ເພາະບໍ່ວ່າແມ່ຈະໄປທີ່ໃດ, ຂ້ານ້ອຍຈະໄປນຳ; ແມ່ຢູ່ທີ່ໃດ, ຂ້ານ້ອຍກໍຈະຢູ່ນຳ;
ປະຊາຊົນຂອງແມ່ກໍຈະເປັນປະຊາຊົນຂອງຂ້ານ້ອຍ, ແລະ ພຣະເຈົ້າຂອງແມ່ ກໍຈະເປັນພຣະເຈົ້າຂອງຂ້ານ້ອຍ.[17]ແມ່ຕາຍຢູ່ທີ່ໃດ,
ຂ້ານ້ອຍກໍຈະຕາຍ ແລະ ຈະຝັງເອົາໄວ້ທີ່ນັ້ນ. ຂໍພຣະຢາເວ ລົງໂທດຂ້ານ້ອຍ, ແລະ ຍິ່ງກວ່ານັ້ນ,
ຂໍໃຫ້ມີພຽງຄວາມຕາຍເທົ່ານັ້ນທີ່ຈະແຍກພວກເຮົາອອກຈາກກັນໄດ້."[18]ເມື່ອນາງນາໂອມີ
ໄດ້ເຫັນວ່ານາງຣຸດມີຄວາມຕັ້ງໃຈຈິງທີ່ຈະໄປພ້ອມກັບນາງ, ນາງຈຶ່ງໄດ້ຢຸດໂຕ້ແຍ່ງກັບຣຸດ.
[19]ດັ່ງນັ້ນທັງສອງຄົນຈຶ່ງເດີນທາງມາຈົນເຖິງເມືອງເບັດເລເຮັມ. ເມື່ອພວກເຂົາມາເຖິງທີ່ເມືອງເບັດເລເຮັມ,
ຜູ້ຄົນທັງເມືອງຕ່າງກໍມີຄວາມຕື່ນເຕັ້ນໃນການກັບມາຂອງພວກເຂົາ. ພວກຜູ້ຍິງເວົ້າວ່າ,
"ນີ້ຄືນາງນາໂອມີແມ່ນບໍ?"[20]ແຕ່ນາງນາໂອມີເວົ້າກັບພວກນາງວ່າ, "ຢ່າຮ້ອງຂ້ານ້ອຍວ່ານາໂອມີເລີຍ. ຈົ່ງຮ້ອງຂ້ານ້ອຍວ່າມາຣາເຖີດ,
ເພາະອົງຜູ້ຊົງສະຖິດໄດ້ກະທຳຕໍ່ຂ້ອຍຢ່າງຂົມຂື່ນໃຈຫລາຍ.[21]ຂ້ານ້ອຍອອກໄປຢ່າງບໍຣິບູນ,
ແຕ່ພຣະຢາເວໄດ້ນຳຂ້ານ້ອຍກັບມາບ້ານອີກຄັ້ງດ້ວຍຄວາມວ່າງເປົ່າ. ດັ່ງນັ້ນ ແລ້ວເປັນຫຍັງພວກເຈົ້າຈຶ່ງຮ້ອງຂ້ານ້ອຍວ່ານາໂອມີ, ເບິ່ງແມ
ພຣະຢາເວໄດ້ລົງໂທດຂ້ານ້ອຍ, ອົງຜູ້ຊົງສະຖິດໄດ້ກະທຳໃຫ້ຂ້ານ້ອຍເຈັບປວດຫລາຍ?"
[22]ດັ່ງນັ້ນນາງນາໂອມີ ແລະ ນາງຣຸດຊາວໂມອາບ, ຜູ້ເປັນລູກໄພ້ຂອງນາງ, ໄດ້ກັບມາຈາກປະເທດໂມອາບ. ພວກນາງໄດ້ມາເຖິງເມືອງເບັດເລເຮັມ
ໃນຊ່ວງເລີ່ມຕົ້ນຣະດູການເກັບກ່ຽວເຂົ້າບາເລ.


generated on Tue Jun 17 19:01:42 2025

2 [1]ບັດນີ້ຜົວຂອງນາງນາໂອມີ, ຄືເອລີເມເຫລັກ, ມີຍາດຄົນຫນຶ່ງ, ຊື່ໂບອາດ, ຊຶ່ງເປັນຜູ້ຄົນຮັ່ງມີ, ແລະ ເປັນຄົນມີອິດທິພົນ.[2]ນາງຣຸດ,
ຊາວໂມອາບໄດ້ເວົ້າກັບນາງນາໂອມີວ່າ, "ບັດນີ້ ຂໍໃຫ້ຂ້ານ້ອຍໄປ ແລະ ເກັບຮວງເຂົ້າທີ່ຫລົ່ນລົງເຫລືອໄວ້ໃນທົ່ງນາ.
ຂ້ານ້ອຍຈະຕິດຕາມຜູ້ໃດກໍໄດ້ທີ່ຂ້ານ້ອຍເຫັນຄວາມມີນ້ຳໃຈໃນດວງຕາຂອງເຂົາ." ດັ່ງນັ້ນນາງນາໂອມີໄດ້ເວົ້າກັບນາງວ່າ, "ຈົ່ງໄປເຖີດ,
ລູກສາວຂອງເຮົາ."

[3]ນາງຣຸດໄດ້ໄປ ແລະ ເກັບເຂົ້າທີ່ຕົກໃນທົ່ງນາພາຍຫລັງທີ່ພວກເຂົາໄດ້ເກັບກ່ຽວ. ນາງບັງເອີນໄດ້ເຂົ້າມາໃນທົ່ງນາຂອງໂບອາດ,
ຜູ້ຊຶ່ງເປັນຍາດກັບເອລີເມເລັກ.[4]ເບິ່ງແມ, ໂບອາດໄດ້ມາຈາກເບັດເລເຮັມ ແລະ ເວົ້າກັບຜູ້ເກັບກ່ຽວເຂົ້າວ່າ,
"ຂໍໃຫ້ພຣະຢາເວຊົງຢູ່ກັບພວກທ່ານເຖີດ." ພວກເຂົາຕອບໂບອາດວ່າ, "ຂໍໃຫ້ພຣະຢາເວອວຍພອນທ່ານ."
[5]ແລ້ວໂບອາດໄດ້ເວົ້າກັບຄົນຮັບໃຊ້ຂອງເຂົາທີ່ຄວບຄຸມດູແລຄົນເກັບກ່ຽວເຂົ້ານັ້ນວ່າ,
"ຍິງສາວນີ້ເປັນຄົນຂອງຜູ້ຊາຍຄົນໃດນໍ?"[6]ຄົນຄວບຄຸມດູແລຄົນກ່ຽວເຂົ້າໄດ້ຕອບ ແລະເວົ້າວ່າ
"ນາງເປັນຍິງສາວຊາວໂມອາບຜູ້ຊຶ່ງກັບມາພ້ອມກັບນາງນາໂອມີຈາກແຜ່ນດິນໂມອາບ.[7]ນາງໄດ້ເວົ້າກັບຂ້າພະເຈົ້າວ່າ,
"ກະຣຸນາອະນຸຍາດໃຫ້ຂ້ອຍເກັບສິ່ງທີ່ຕົກໃນທົ່ງນາ ຫລັງຈາກທີ່ພວກຄົນງານໄດ້ເກັບກ່ຽວເຂົ້າ.' ດັ່ງນັ້ນນາງໄດ້ມາທີ່ນີ້ ແລະ
ສືບຕໍ່ຕັ້ງແຕ່ເຊົ້າຈົນເຖິງດຽວນີ້, ຍົກເວັ້ນພຽງແຕ່ຕອນທີ່ນາງພັກພຽງເລັກນ້ອຍໃນບ້ານ."
[8]ແລ້ວໂບອາດຈຶ່ງໄດ້ເວົ້າກັບນາງຣຸດວ່າ, "ເຈົ້າກຳລັງຟັງເຮົາເວົ້າຢູ່ບໍ່, ລູກສາວຂອງເຮົາ? ຢ່າໄປເກັບເຂົ້າ ທີ່ຕົກທົ່ງນາອື່ນ;
ຢ່າໄປຈາກທົ່ງນາຂອງເຮົາ. ແຕ່ຈົ່ງຢູ່ທີ່ນີ້, ແລະ ເຮັດວຽກກັບພວກສາວຄົນງານຂອງເຮົາ.
[9]ໃຫ້ຈັບຕາເບິ່ງທົ່ງນາທີ່ພວກຜູ້ຊາຍກຳລັງເກັບກ່ຽວຢູ່ນັ້ນ ແລະ ຈົ່ງຕິດຕາມພວກຜູ້ຍິງຄົນອື່ນໆໄປ. ຂ້ອຍໄດ້ສັ່ງພວກຜູ້ຊາຍ
ບໍ່ໃຫ້ແຕະຕ້ອງຕົວເຈົ້າ, ເມື່ອໃດກໍຕາມເມື່ອເຈົ້າກະຫາຍນ້ຳ, ໃຫ້ເຈົ້າໄປທີ່ຫມໍ້ນ້ຳ ແລະ ດື່ມນ້ຳທີ່ພວກຜູ້ຊາຍໄດ້ຕັກໄວ້ໃຫ້ນັ້ນ."
[10]ແລ້ວນາງກໍກົ້ມລົງຕໍ່ຫນ້າໂບອາດ, ເອົາຫົວກົ້ມລົງທີ່ພື້ນດິນ. ນາງກ່າວກັບເຂົາວ່າ, "ເປັນຫຍັງຂ້ານ້ອຍຈຶ່ງໄດ້ຮັບຄວາມເມດຕາຈາກທ່ານເຊັ່ນນີ້,
ຊຶ່ງທ່ານດີຕໍ່ຂ້ານ້ອຍທີ່ເປັນຄົນຕ່າງດ້າວ?"[11]ໂບອາດໄດ້ຕອບ ແລະ ເວົ້າແກ່ນາງວ່າ, "ຂ້ອຍໄດ້ຮັບຮູ້
ໃນສິ່ງທີ່ເຈົ້າເຮັດທັງຫມົດຫລັງຈາກທີ່ຜົວຂອງເຈົ້າຕາຍ. ເຈົ້າໄດ້ຈາກພໍ່ແມ່ຂອງເຈົ້າ, ແລະ ແຜ່ນດິນເກີດຂອງເຈົ້າເພື່ອຕິດຕາມແມ່ຂອງຜົວ
ແລະມາຢູ່ກັບປະຊາຊົນທີ່ເຈົ້າບໍ່ຮູ້ຈັກ.[12]ຂໍພຣະຢາເວປຣະທານລາງວັນສຳລັບການກະທຳຂອງເຈົ້າ.
ຂໍໃຫ້ເຈົ້າໄດ້ຮັບການຕອບແທນຢ່າງບໍຣິບູນຈາກພຣະຢາເວ, ພຣະເຈົ້າຂອງຊົນຊາດອິສະຣາເອນ,
ພາຍໃຕ້ຮົ່ມປີກຂອງພຣະອົງເຈົ້າຈະໄດ້ຮັບການຄຸ້ມຄອງ."
[13]ດັ່ງນັ້ນນາງຈຶ່ງເວົ້າວ່າ, "ຂໍໃຫ້ຂ້ານ້ອຍໄດ້ຮັບຄວາມຊື່ນຊອບໃນສາຍຕາຂອງທ່ານ, ເຈົ້ານາຍຂອງຂ້ານ້ອຍ, ເພາະທ່ານໄດ້ຫນູນໃຈຂ້ານ້ອຍ,
ແລະ ທ່ານໄດ້ເວົ້າດ້ວຍຄວາມກະຣຸນາຕໍ່ຂ້ານ້ອຍ, ເຖິງແມ່ນວ່າຂ້ານ້ອຍເອງກໍບໍ່ໄດ້ເປັນສາວໃຊ້ຄົນຫນຶ່ງຂອງທ່ານ."
[14]ໃນເວລານັ້ນໂບອາດໄດ້ເວົ້າກັບນາງຣຸດວ່າ, "ຈົ່ງມາທີ່ນີ້, ແລະກິນເຂົ້າຈີ່, ແລະຈ້ຳເຂົ້າຈີ່ຂອງເຈົ້າໃນເຫລົ້າອາງຸ່ນນີ້ທ້ອນ." ນາງໄດ້ນັ່ງຂ້າງໆ
ພວກຄົນກ່ຽວເຂົ້າ, ແລະ ເຂົາເອົາເຂົ້າຈີ່ອົບໃຫ້ນາງ. ນາງກໍໄດ້ກິນຈົນກະທັ້ງນາງພໍໃຈ ແລະ ປະປ່ອຍໄວ້ສ່ວນທີ່ເຫລືອ.
[15]ເມື່ອນາງລຸກຂຶ້ນແລ້ວໄປເກັບເຂົ້າທີ່ຕົກ, ໂບອາດໄດ້ສັ່ງພວກຜູ້ຊາຍຫນຸ່ມຂອງເຂົາວ່າ, "ຈົ່ງໃຫ້ນາງໄດ້ເກັບເຂົ້າ ແມ່ນແຕ່ທ່າມກາງຟ່ອນເຂົ້າ,
ແລະ ຢ່າໄດ້ຕຳໜິນາງເລີຍ.[16]ຈົ່ງດຶງຮວງເຂົ້າອອກມາຈາກຟ່ອນ ແລະ ຖິ້ມໄວ້ໃຫ້ນາງເກັບເອົາ, ແລະ ຢ່າໄດ້ຫ້າມນາງເລີຍ."
[17]ດັ່ງນັ້ນນາງຈຶ່ງເກັບເມັດເຂົ້າໃນທົ່ງນາຈົນຮອດແລງ. ແລ້ວນາງກໍຟາດຮວງເຂົ້າທີ່ນາງໄດ້ຮວບຮວມມານັ້ນ, ແລະ ເມັດເຂົ້າໄດ້ປະມານສິບກິໂລ.
[18]ນາງຍົກເຂົ້ານັ້ນຂຶ້ນ ແລະ ເຂົ້າໄປໃນເມືອງ. ແລ້ວແມ່ຍ່າໄດ້ເຫັນເຂົ້າທີ່ນາງໄດ້ເກັບມານັ້ນ.
ນາງເອົາເມັດເຂົ້າອົບທີ່ເຫລືອຈາກອາຫານທີ່ນາງໄດ້ກິນອີ່ມແລ້ວນັ້ນ ໃຫ້ແມ່ຍ່າກິນ.
[19]ແມ່ຍ່ານາງຈຶ່ງເວົ້າກັບນາງວ່າ, "ມື້ນີ້ເຈົ້າໄປເກັບເຂົ້າທີ່ຕົກຢູ່ໃສ?"
ແລ້ວນາງຣຸດໄດ້ບອກແມ່ຍ່າຂອງນາງກ່ຽວກັບຊາຍທີ່ເປັນເຈົ້າຂອງທົ່ງນາທີ່ນາງໄດ້ເຮັດວຽກນາງເວົ້າວ່າ, "ຊາຍທີ່ເປັນເຈົ້າຂອງທົ່ງນາ
ທີ່ຂ້ານ້ອຍໄປເຮັດວຽກມື້ນີ້ຊື່ວ່າໂບອາດ."[20]ນາງນາໂອມີເວົ້າກັບລູກໄພ້ຂອງນາງວ່າ, "ຂໍໃຫ້ພຣະຢາເວອວຍພອນເຂົາ
ຜູ້ທີ່ມີຄວາມສັດຊື່ຂອງເຂົາຕໍ່ຜູ້ທີ່ຍັງມີຊີວິດຢູ່ ຫລືຜູ້ທີ່ຕາຍໄປແລ້ວບໍ່ເຄີຍຂາດ." ນາງນາໂອມີໄດ້ກ່າວກັບນາງວ່າ,
"ຊາຍຄົນນັ້ນເປັນຫນຶ່ງໃນບັນດາຍາດພີ່ນ້ອງສະຫນິດຜູ້ໄຖ່ຂອງພວກເຮົາ."
[21]ນາງຣຸດຊາວໂມອາບໄດ້ເວົ້າວ່າ, "ແມ່ນແທ້, ເຂົາໄດ້ເວົ້າວ່າ, "ເຈົ້າຄວນຢູ່ໃກ້ໆ ກັບພວກຄົນງານຊາຍໜຸ່ມຂອງເຮົາ
ຈົນກວ່າພວກເຂົາຈະກ່ຽວເຂົ້າຂອງເຂົາໃຫ້ແລ້ວທັງຫມົດ."[22]ນາງນາໂອມີເວົ້າກັບນາງຣຸດລູກໄພ້ຂອງນາງວ່າ, "ດີແລ້ວລູກເອີຍ,
ທີ່ເຈົ້າອອກໄປກັບພວກຄົນງານຍິງຂອງເຂົາ, ເພື່ອເຈົ້າຈະບໍ່ຕົກຢູ່ໃນອັນຕະຣາຍຈາກທົ່ງນາອື່ນໆ."
[23]ດັ່ງນັ້ນນາງໄດ້ຢູ່ໃກ້ໆ ຄົນງານຍິງຂອງໂບອາດ ເພື່ອເກັບເຂົ້າທີ່ຕົກຈົນສິ້ນຣະດູເກັບກ່ຽວເຂົ້າບາເລ ແລະເຂົ້າສາລີ.
ນາງໄດ້ຢູ່ກັບແມ່ຍ່າຂອງນາງ.

 generated on Tue Jun 17 19:01:42 2025

3 [1]ນາງນາໂອມີ, ແມ່ຍ່າຂອງນາງເວົ້າກັບນາງວ່າ, "ໂອລູກສາວຂອງແມ່ເອີຍ, ແມ່ຄວນທີ່ຈະຫາທີ່ພັກສຳລັບເຈົ້າ
ເພື່ອສິ່ງເຫລົ່ານັ້ນອາດຈະໄປໄດ້ດີສຳລັບເຈົ້າ?[2]ບັດນີ້ ໂບອາດ, ຊາຍຜູ້ຊຶ່ງເປັນນາຍຂອງພວກຄົນຮັບໃຊ້ຍິງສາວ ທີ່ເຈົ້າໄປນຳ,
ເຂົາເປັນຍາດສະຫນິດຂອງເຮົາບໍ່ແມ່ນຫວາ? ເບິ່ງເດີ້, ເຂົາຈະໄປນວດເຂົ້າບາເລທີ່ລານນວດເຂົ້າໃນຄືນນີ້.

[3]ສະນັ້ນ, ຈົ່ງໄປອາບນ້ຳລ້າງໂຕເຈົ້າ, ໃສ່ເສື້ອຜ້າທີ່ດີທີ່ສຸດຂອງເຈົ້າ, ແລ້ວໄປທີ່ລານນວດເຂົ້າ.
ແຕ່ຢ່າໃຫ້ຊາຍນັ້ນຮູ້ວ່າເຈົ້າຢູ່ທີ່ນັ້ນຈົນກ່ວາເຂົາຈະກິນ ແລະດື່ມແລ້ວ.[4]ແຕ່ເມື່ອເຂົາໄປນອນ,
ຈົ່ງສັງເກດວ່າເຂົານອນບ່ອນໃດເພື່ອພາຍຫລັງເຈົ້າຈະໄປຫາເຂົາໄດ້, ແລ້ວໃຫ້ເປີດຜ້າຄຸມຕີນຂອງເຂົາ, ແລະ ເຂົ້າໄປນອນທີ່ນັ້ນ.
ແລ້ວເຂົາຈະບອກເຈົ້າວ່າຈະຕ້ອງເຮັດແນວໃດ"[5]ນາງຣຸດກ່າວກັບນາງນາໂອມີວ່າ, "ລູກຈະເຮັດທຸກສິ່ງຕາມທີ່ແມ່ສັ່ງ."
[6]ດັ່ງນັ້ນນາງກໍລົງໄປທີ່ລານນວດເຂົ້າ, ແລະນາງເຮັດຕາມຄຳແນະນຳຂອງແມ່ຍ່າທີ່ໄດ້ບອກນາງໄວ້.[7]ເມື່ອໂບອາດໄດ້ກິນ ແລະດື່ມແລ້ວ
ແລະຈິດໃຈຂອງເຂົາມີຄວາມສຸກ, ແລ້ວເຂົາກໍໄປນອນຢູ່ທາງຫລັງກອງເຂົ້າ. ແລ້ວນາງຄ່ອຍໆ ເຂົ້າໄປ ເປີດຜ້າຄຸມຕີນຂອງເຂົາ, ແລະ
ນອນຢູ່ບ່ອນນັ້ນ.
[8]ພໍທ່ຽງຄືນ ຊາຍຄົນນັ້ນກໍສະດຸ້ງ. ເຂົາພິກໂຕ, ແລະ ເຫັນມີຜູ້ຍິງຄົນຫນຶ່ງມານອນຢູ່ປາຍຕີນຂອງເຂົາ![9]ເຂົາຈຶ່ງຖາມວ່າ, "ເຈົ້າເປັນໃຜ"
ນາງຈຶ່ງຕອບວ່າ "ຂ້ອຍຊື່ນາງຣຸດ, ເປັນສາວໃຊ້ຂອງນາຍທ່ານ. ຂໍໂຜດໃຫ້ຂ້າຮັບໃຊ້ຂອງທ່ານໄດ້ຢູ່ກ້ອງຜ້າຄຸມຂອງທ່ານເຖີດ,
ເພາະນາຍທ່ານເປັນຍາດສະຫນິດຂອງຂ້ານ້ອຍ."
[10]ໂບອາດກໍກ່າວວ່າ, "ບຸດຍິງເອີຍ, ຂໍພຣະຢາເວຊົງອວຍພອນເຈົ້າ. ເພາະເຈົ້າມີນ້ຳໃຈໃນຕອນຫລັງນີ້ຫລາຍກວ່າຕອນທຳອິດ,
ເພາະເຈົ້າບໍ່ໄດ້ໄປຕາມຊາຍຫນຸ່ມຄົນໃດເລີຍ ບໍ່ວ່າເປັນຄົນຍາກຈົນ ຫລືຄົນລ້ຳລວຍ.[11]ບັດນີ້, ບຸດຍິງຂອງເຮົາເອີຍ, ຢ່າຢ້ານກົວເລີຍ!
ເຮົາຈະເຮັດເພື່ອເຈົ້າທຸກຢ່າງຕາມທີ່ເຈົ້າກ່າວ, ເພາະຄົນທັງເມືອງຂອງເຮົາກໍຮູ້ວ່າເຈົ້າເປັນຍິງທີ່ຫນ້າຍົກຍ້ອງ.
[12]ແມ່ນຈິງແທ້ ທີ່ເຮົາເປັນຍາດພີ່ນ້ອງສະຫນິດກັນ ແຕ່ມີຄົນຫນຶ່ງທີ່ເປັນຍາດສະຫນິດຫລາຍກວ່າເຮົາ.[13]ຈົ່ງພັກຢູ່ທີ່ນີ້ຄືນນີ້, ແລະ ໃນຕອນເຊົ້າ,
ຖ້າເຂົາຈະເຮັດຕາມສິດທິຂອງການເປັນຍາດສະຫນິດ, ກໍດີແລ້ວ, ໃຫ້ເຂົາເຮັດຕາມຫນ້າທີ່ແຫ່ງການເປັນຍາດສະຫນິດນັ້ນ.
ແຕ່ຖ້າເຂົາບໍ່ເຮັດເພື່ອເຈົ້າ, ແລ້ວເຮົາກໍຈະໃຊ້ສິດນັ້ນ, ໂດຍພຣະຢາເວຊົງພຣະຊົນຢູ່ສັນໃດ. ຈົ່ງນອນພັກຈົນກວ່າຈະຮອດເຊົ້າ."
[14]ດັ່ງນັ້ນນາງຈຶ່ງນອນຢູ່ທີ່ປາຍຕີນຂອງເຂົາຈົນຮອດເຊົ້າ. ແຕ່ນາງຕື່ນກ່ອນແຈ້ງທີ່ຄົນຈະຈື່ກັນໄດ້. ເພາະໂບອາດບອກວ່າ,
"ຢ່າໃຫ້ຄົນອື່ນຮູ້ວ່າມີຜູ້ຍິງມາທີ່ລານນວດເຂົ້າ."[15]ແລ້ວໂບອາດກໍບອກວ່າ, "ຈົ່ງແກ້ເສື້ອຄຸມຂອງເຈົ້າອອກ" ເມື່ອນາງເຮັດຕາມ,
ເຂົາກໍຕັກເຂົ້າບາເລໃຫ້ນາງພົກຂະຫນາດໃຫຍ່ໃສ່ລົງໄປ. ແລ້ວໃຫ້ນາງແບກກັບໄປ. ແລ້ວເຂົາກໍເຂົ້າໄປໃນເມືອງ.
[16]ເມື່ອນາງຣຸດກັບມາຫາແມ່ຍ່າ, ນາງກໍຖາມວ່າ, "ລູກສາວຂອງແມ່ເອີຍ, ເຈົ້າເປັນຈັ່ງໃດແນ່?"
ແລ້ວນາງຣຸດກໍເລົ່າເຖິງທຸກສິ່ງທີ່ຊາຍນັ້ນໄດ້ເຮັດເພື່ອນາງ.[17]ນາງໄດ້ກ່າວວ່າ "ທ່ານໄດ້ໃຫ້ເຂົ້າສາລີແກ່ລູກ
ຮອດພົກຂະຫນາດໃຫຍ່ເພາະທ່ານບອກວ່າ, "ເຈົ້າຢ່າກັບໄປຫາແມ່ຍ່າເຈົ້າດ້ວຍມືເປົ່າເລີຍ."[18]ແລ້ວນາໂອມີຈຶ່ງກ່າວວ່າ,
"ລູກສາວຂອງແມ່ເອີຍ, ຈົ່ງຢູ່ທີ່ນີ້ ຈົນກວ່າຈະຮູ້ເລື່ອງວ່າເປັນຈັ່ງໃດ,
ເພາະຊາຍນັ້ນຈະບໍ່ຢຸດພັກຈົນກວ່າເຂົາຈະດຳເນີນເລື່ອງໃຫ້ສຳເລັດໃນວັນນີ້."

 generated on Tue Jun 17 19:01:42 2025

4 [1]ບັດນີ້ໂບອາດໄປທີ່ປະຕູເມືອງ ແລະ ນັ່ງຢູ່ທີ່ນັ້ນ. ບໍ່ດົນປານໃດ, ຍາດສະໜິດທີ່ໂບອາດກ່າວເຖິງກໍຍ່າງຜ່ານ. ໂບອາດຈຶ່ງກ່າວກັບເຂົາວ່າ,
"ເພື່ອນເອີຍ, ຂໍເຊີນເຂົ້າມາ ແລະນັ່ງທີ່ນີ້ເຖີດ." ຊາຍຄົນນັ້ນກໍເຂົ້າມາ ແລະນັ່ງລົງ.[2]ຈາກນັ້ນ ໂບອາດກໍພາພວກຜູ້ໃຫຍ່ຂອງເມືອງມາສິບຄົນ
ແລະ ກ່າວວ່າ "ນັ່ງທີ່ນີ້ເຖີດ" ພວກເຂົາກໍນັ່ງລົງ.

[3]ໂບອາດຈຶ່ງເວົ້າກັບຍາດສະໜິດຄົນນັ້ນວ່າ, "ນາງນາໂອມີຜູ້ທີ່ໄດ້ກັບມາຈາກແຜ່ນດິນໂມອາບ, ກຳລັງຂາຍທີ່ດິນທີ່ເປັນສ່ວນຂອງເອລີເມເລັກ
ທີ່ເປັນພີ່ນ້ອງຂອງເຮົາ.[4]ຂ້າພະເຈົ້າຄິດທີ່ຈະແຈ້ງໃຫ້ທ່ານຮູ້ ແລະ ບອກແກ່ທ່ານວ່າ, "ຈົ່ງຊື້ທີ່ດິນນັ້ນໄວ້ ຕໍ່ໜ້າຄົນທັງປວງທີ່ນັ່ງຢູ່ທີ່ນີ້, ແລະ
ຕໍ່ໜ້າພວກຜູ້ໃຫຍ່ຂອງຊາວເມືອງຂອງຂ້າພະເຈົ້າ," ຖ້າທ່ານຢາກຈະໄຖ່ທີ່ດິນນັ້ນ ກໍຈົ່ງໄຖ່ເຖີດ. ແຕ່ຖ້າທ່ານບໍ່ຢາກໄຖ່ທີ່ດິນນັ້ນ
ກໍຂໍບອກຂ້າພະເຈົ້າໃຫ້ຮູ້ດ້ວຍເຖີດ, ເພາະບໍ່ມີໃຜທີ່ຈະໄຖ່ທີ່ດິນນີ້ໄດ້ ນອກຈາກທ່ານ, ແລະ ຂ້າພະເຈົ້າກໍມີສິດຕໍ່ໄປຈາກທ່ານ."
ແລ້ວຊາຍຄົນນັ້ນຈຶ່ງກ່າວວ່າ, "ຂ້າພະເຈົ້າຈະໄຖ່ທີ່ດິນນີ້ເອງ."
[5]ແລ້ວໂບອາດຈຶ່ງກ່າວວ່າ, "ໃນວັນທີ່ທ່ານຊື້ທີ່ດິນນາຈາກມືຂອງນາງນາໂອມີ, ທ່ານຕ້ອງຮັບເອົານາງຣຸດຊາວໂມອາບ, ເມຍຂອງຜູ້ຕາຍໄວ້ດ້ວຍ,
ເພື່ອນາມຂອງຜູ້ຕາຍຈະສືບຕໍ່ໄປເຖິງມໍຣະດົກຂອງເຂົາ."[6]ແລ້ວຊາຍຄົນນັ້ນຈຶ່ງຕອບວ່າ,
"ຂ້າພະເຈົ້າຈະໄຖ່ທີ່ດິນນັ້ນເພື່ອຕົວເອງໂດຍບໍ່ເຮັດໃຫ້ມໍຣະດົກຂອງຂ້າພະເຈົ້າເສຍໄປໄດ້.
ທ່ານຈົ່ງເອົາສິດທິການໄຖ່ຂອງຂ້າພະເຈົ້າໄປໄຖ່ເພື່ອຕົວທ່ານເອງເຖີດ, ເພາະຂ້າພະເຈົ້າບໍ່ສາມາດໄຖ່ທີ່ດິນນັ້ນໄດ້."
[7]ເນື່ອງຈາກນີ້ເປັນທຳນຽມໃນອິສະຣາເອນສະໄໝກ່ອນກ່ຽວກັບການໄຖ່ ແລະ ການແລກປ່ຽນສິ່ງຂອງ. ການຢືນຢັນຂໍ້ຕົກລົງທຸກຢ່າງ,
ຄົນໜຶ່ງຕ້ອງຖອດເກີບຂ້າງໜຶ່ງຂອງເຂົາ ແລະ ໃຫ້ເກີບນັ້ນກັບເພື່ອນບ້ານ;
ນີ້ເປັນທຳນຽມປະຕິບັດໃນການເຮັດຂໍ້ຕົກລົງຕາມກົດໝາຍໃນອິສະຣາເອນ.[8]ເພາະເຫດນີ້ ຍາດສະໜິດທຸກຄົນຈຶ່ງບອກກັບໂບອາດວ່າ,
"ຈົ່ງຊື້ທີ່ດິນສຳລັບຕົວທ່ານເອງເຖີດ," ແລະ ເຂົາກໍຖອດເກີບຂ້າງໜຶ່ງຂອງເຂົາອອກ.
[9]ແລ້ວໂບອາດຈຶ່ງໄດ້ເວົ້າກັບພວກຜູ້ໃຫຍ່ແລະ ຄົນທັງປວງວ່າ, "ພວກທ່ານໄດ້ເປັນພະຍານໃນວັນນີ້ວ່າ
ຂ້າພະເຈົ້າໄດ້ຊື້ທຸກສິ່ງທີ່ເປັນຂອງເອລີເມເລັກ ແລະ ທຸກສິ່ງທີ່ເປັນຂອງຄີລີໂອນ ແລະຂອງມາໂລນຈາກມືຂອງນາໂອມີ.[10]ຍິ່ງກວ່ານັ້ນ
ຄືນາງຣຸດຊາວໂມອາບທີ່ເປັນເມຍຂອງມາໂລນ: ຂ້າພະເຈົ້າກໍຈະໄດ້ມາເປັນເມຍຂອງຂ້າພະເຈົ້າ,
ເພື່ອທີ່ຂ້າພະເຈົ້າຈະຍົກນາມຂອງຜູ້ຕາຍເໜືອມໍຣະດົກຂອງເຂົາ, ເພື່ອນາມຂອງເຂົາຈະບໍ່ຖືກຕັດອອກຈາກອ້າຍນ້ອງຂອງເຂົາ
ແລະຈາກປະຕູແຫ່ງສະຖານທີ່ຂອງເຂົາ. ທ່ານທັງຫລາຍໄດ້ເປັນພະຍານໃນວັນນີ້ດ້ວຍ."
[11]ຄົນທັງປວງທີ່ຢູ່ປະຕູເມືອງ ແລະພວກຜູ້ອາວຸໂສຈຶ່ງກ່າວວ່າ, "ພວກເຮົາເປັນພະຍານ.
ຂໍພຣະຢາເວຊົງເຮັດໃຫ້ຍິງນັ້ນທີ່ໄດ້ເຂົ້າມາທີ່ບ້ານຂອງທ່ານ ເປັນເໝືອນກັບຣາເຊັນ ແລະ ເລອາເທີນ, ຍິງທັງສອງຄົນທີ່ໄດ້ສ້າງເຮືອນແຫ່ງອິສ
ະຣາເອນ; ແລະ ຂໍໃຫ້ທ່ານຈະເຣີນຮຸ່ງເຮືອງໃນເອຟຣັດ ແລະ ມີຊື່ສຽງໃນເບັດເລເຮັມ.[12]ຂໍໃຫ້ເຮືອນຂອງທ່ານເປັນເໝືອນເຮືອນຂອງເປເຣັດ,
ຜູ້ທີ່ຕາມາໄດ້ໃຫ້ກຳເນີດໃຫ້ແກ່ຢູດາຍ, ຜ່ານທາງລູກຫລານທີ່ພຣະຢາເວຈະປຣະທານແກ່ທ່ານຈາກຍິງສາວຄົນນີ້."
[13]ດັ່ງນັ້ນ ໂບອາດຈຶ່ງຮັບນາງຣຸດມາ, ແລະນາງກໍໄດ້ເປັນເມຍຂອງເຂົາ. ເຂົາກໍຫລັບນອນກັບນາງ, ແລະ ພຣະຢາເວກໍອະນຸຍາດໃຫ້ນາງຖືພາ,
ນາງກໍໃຫ້ກຳເນີດລູກຊາຍຄົນໜຶ່ງ.[14]ພວກຜູ້ຍິງກໍເວົ້າກັບນາງນາໂອມີວ່າ, "ສາທຸການແດ່ພຣະຢາເວ,
ຜູ້ຊົງບໍ່ປະຖິ້ມເຈົ້າໃຫ້ປາສະຈາກຍາດມິດ, ໃນເວລານີ້ໄດ້ໂຜດໃຫ້ເຈົ້າມີຫລານຊາຍ. ຂໍໃຫ້ເດັກຄົນນີ້ມີຊື່ສຽງໃນອິສະຣາເອນ.
[15]ຂໍໃຫ້ເຂົາເປັນຜູ້ຟື້ນຟູຊີວິດ ແລະ ເປັນຜູ້ລ້ຽງດູເຈົ້າໃນຍາມເຖົ້າແກ່, ເພາະລູກໄພ້ຂອງເຈົ້າ, ຜູ້ທີ່ຮັກເຈົ້າ, ຜູ້ເຮັດດີກັບທ່ານ
ທີ່ດີກວ່າລູກຊາຍເຈັດຄົນ, ທີ່ໄດ້ໃຫ້ກຳເນີດເຂົາ."
[16]ນາງນາໂອມີຮັບເດັກນັ້ນມາອູ້ມໄວ້ໃນອ້ອມອົກ ແລະ ດູແລເຂົາ.[17]ພວກຜູ້ຍິງທີ່ເປັນເພື່ອນບ້ານໄດ້ຕັ້ງຊື່ໃຫ້ກັບເຂົາ, ເວົ້າວ່າ,
"ພວກນາງຕັ້ງຊື່ເຂົາວ່າ ໂອເບັດ. ເຂົາໄດ້ເປັນພໍ່ຂອງເຢຊີ, ທີ່ເປັນພໍ່ຂອງດາວິດ.
[18]ຕໍ່ໄປນີ້ເປັນພົງພັນຂອງເປເຣັດ: ເປເຣັດເປັນພໍ່ຂອງເຮຊະໂຣນ,[19]ເຮຊະໂຣນເປັນພໍ່ຂອງຣາມ, ຣາມເປັນພໍ່ຂອງອຳມີນາດາບ,
[20]ອຳມີນາດາບເປັນພໍ່ຂອງນາໂຊນ, ນາໂຊນເປັນພໍ່ຂອງຊັນໂມນ,[21]ຊັນໂມນເປັນພໍ່ຂອງໂບອາດ, ໂບອາດເປັນພໍ່ຂອງໂອເບັດ,
[22]ໂອເບັດເປັນພໍ່ຂອງເຢຊີ ແລະ ເຢຊີເປັນພໍ່ຂອງດາວິດ.

# 1 ຊາມູເອນ

1 [1]ມີຊາຍຄົນໜຶ່ງຊື່ງເປັນຊາວຣາມາຂອງເມືອງຊູເຟ, ເຂດເນີນພູເອຟຣາອິມ; ຊື່ຂອງລາວແມ່ນເອນການາ ລູກຊາຍຂອງເຢໂຣຣາມ
ລູກຊາຍຂອງເອລີຮູ ລູກຊາຍຂອງໂຕຮູ ລູກຊາຍຂອງຊູ, ຄົນໃນເຜົ່າເອຟາຣາອິມ.[2]ລາວມີເມຍສອງຄົນ; ຊື່ເມຍຄົນທີ່ໜຶ່ງຄື: ນາງຮັນນາ,
ແລະເມຍຄົນທີ່ສອງຊື່ ນາງເປນິນນາ. ນາງເປນິນນາມີລູກ, ແຕ່ນາງຮັນນາບໍ່ມີລູກ.

[3]ຊາຍຄົນນີ້ໄດ້ໄປຈາກເມືອງຂອງລາວ ທຸກປີໄປນະມັສະການ ແລະ ຖວາຍສັດບູຊາແດ່ພຣະຢາເວຈອມໂຍທາ ທີ່ເມືອງຊີໂລ.
ລູກຊາຍສອງຄົນຂອງເອລີຄື, ໂຮບນີ ແລະ ຟີເນຫັດ, ເປັນປະໂລຫິດຂອງພຣະຢາເວ, ຢູ່ທີ່ນັ້ນ.[4]ເມື່ອເຖິງວັນທີ່ເອນການາຈະຖວາຍສັດບູຊາທຸກປີ,
ລາວໃຫ້ສ່ວນແບ່ງຂອງຊີ້ນແກ່ເປນິນນາເມຍຂອງລາວ, ແລະໃຫ້ແກ່ບັນດາລູກຊາຍ ແລະບັນດາຂອງລູກສາວທຸກຄົນ.
[5]ແຕ່ລາວໄດ້ແບ່ງໃຫ້ຮັນນາສອງເທົ່າ, ເພາະວ່າລາວຮັກຮັນນາ, ເຖິງວ່າພຣະຢາເວໄດ້ປິດມົດລູກຂອງນາງໄວ້.
[6]ຄູ່ແຂ່ງຂອງນາງກໍເຍາະເຍີ້ຍນາງຢ່າງໜັກ ເພື່ອເຮັດໃຫ້ນາງໃຈຮ້າຍ, ຍ້ອນວ່າພຣະຢາເວໄດ້ປິດມົດລູກຂອງນາງ.
[7]ດັ່ງນັ້ນ ຫລັງຈາກຫລາຍຕໍ່ຫລາຍປີ, ເມື່ອນາງຂຶ້ນໄປທີ່ພຣະວິຫານຂອງພຣະຢາເວກັບຄອບຄົວຂອງນາງ,
ຄູ່ແຂ່ງຂອງນາງກໍເຍາະເຍີ້ຍນາງສະເໝີ. ດັ່ງນັ້ນນາງຈຶ່ງຮ້ອງໄຫ້ ແລະ ບໍ່ກິນຫຍັງເລີຍ.[8]ເອນການາຜົວຂອງນາງກໍເວົ້າກັບນາງສະເໝີວ່າ,
"ຮັນນາ, ເປັນຫຍັງເຈົ້າຈຶ່ງຮ້ອງໄຫ້? ເປັນຫຍັງເຈົ້າຈຶ່ງບໍ່ກິນຫຍັງເລີຍ? ເປັນຫຍັງຈິດໃຈຂອງເຈົ້າຈຶ່ງໂສກເສົ້າ?
ຂ້ອຍບໍ່ດີກວ່າລູກຊາຍສິບຄົນສຳລັບເຈົ້າບໍ?"


generated on Tue Jun 17 19:01:42 2025

9ມີເທື່ອຫນຶ່ງໃນເທດການເຫລົ່ານີ້, ຮັນນາໄດ້ລຸກຂຶ້ນຫລັງຈາກພວກເຂົາກິນ ແລະ ດື່ມອີ່ມແລ້ວ ໃນເມືອງຊີໂລ. ໃນຕອນນັ້ນ ເອລີ
ປະໂລຫິດໄດ້ນັ່ງຢູ່ເທິງບ່ອນນັ່ງຂອງລາວ ທາງຂ້າງປະຕູພຣະວິຫານຂອງພຣະຢາເວ. 10ນາງເຈັບປວດໃຈຫລາຍ;
ນາງຈຶ່ງໄດ້ອະທິຖານຕໍ່ພຣະຢາເວ ແລະ ຮ້ອງໄຫ້ຢ່າງຂົມຂື່ນ.
11ນາງໄດ້ສາບານແລະໄດ້ກ່າວວ່າ, "ພຣະຢາເວຈອມໂຍທາ, ຖ້າພຣະອົງຊົງເບິ່ງເຖິງຄວາມເຈັບປວດຂອງຜູ້ຮັບໃຊ້ຂອງພຣະອົງ ແລະ
ລະນຶກເຖິງຂ້ານ້ອຍ, ແລະບໍ່ຊົງລືມຜູ້ຮັບໃຊ້ຂອງພຣະອົງ, ຂໍປຣະທານລູກຊາຍຄົນຫນຶ່ງໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ,
ແລ້ວຂ້ານ້ອຍຈະມອບເຂົາໃຫ້ແດ່ພຣະຢາເວຕະຫລອດຊີວິດຂອງລາວ, ແລະ ຈະບໍ່ໃຫ້ມີດແຖຖືກຫົວຂອງລາວເລີຍ."
12ຂະນະທີ່ນາງກໍາລັງອະທິຖານຢ່າງຕໍ່ເນື່ອງຕໍ່ຫນ້າພຣະຢາເວນັ້ນ, ເອລີກໍໄດ້ເຝົ້າເບິ່ງປາກຂອງນາງ. 13ຮັນນາໄດ້ເວົ້າໃນໃຈຂອງນາງ.
ຮີມສົບຂອງນາງເຫນັງໄປມາ, ແຕ່ບໍ່ມີໃຜໄດ້ຍິນສຽງຂອງນາງ. ເພາະເຫດນີ້ເອລີຈຶ່ງໄດ້ຄິດວ່ານາງເມົາເຫລົ້າ. 14ເອລີຈຶ່ງໄດ້ເວົ້າກັບນາງວ່າ,
"ນາງຈະເມົາເຫລົ້າໄປອີກດົນປານໃດ? ຈົ່ງຖິ້ມເຫລົ້າອະງຸ່ນຂອງນາງໄປເສຍ."
15ຮັນນາໄດ້ຕອບວ່າ, "ບໍ່ແມ່ນ, ເຈົ້ານາຍຂອງຂ້ານ້ອຍ, ຂ້ານ້ອຍເປັນຍິງຄົນຫນຶ່ງທີ່ມີຈິດໃຈໂສກເສົ້າ. ຂ້ານ້ອຍບໍ່ໄດ້ດື່ມເຫລົ້າອະງຸ່ນ ຫລື
ເຫລົ້າໃດໆ, ແຕ່ຂ້ານ້ອຍໄດ້ເປີດໃຈຕໍ່ຫນ້າພຣະຢາເວ. 16ຢ່າຄິດວ່າຜູ້ຮັບໃຊ້ຂອງທ່ານ ເປັນຜູ້ຍິງທີ່ໄຮ້ຢາງອາຍ;
ຂ້ານ້ອຍໄດ້ເວົ້າອອກມາດ້ວຍຄວາມກັງວົນໃຈ ແລະ ຄວາມອັດອັ້ນໃຈຢ່າງທີ່ສຸດຂອງຂ້ານ້ອຍ."
17ແລ້ວເອລີກໍໄດ້ຕອບ ແລະກ່າວວ່າ, "ຈົ່ງກັບໄປເປັນສຸກເຖີ້ນ;
ຂໍພຣະເຈົ້າແຫ່ງອິສະຣາເອນປຣະທານຕາມຄໍາຂໍທີ່ເຈົ້າໄດ້ຂໍຈາກພຣະອົງ." 18ນາງກໍຕອບວ່າ, "ຂໍຍິງຮັບໃຊ້ຂອງທ່ານ
ໄດ້ເປັນທີ່ພໍໃຈຂອງທ່ານເຖີ້ນ." ແລ້ວຜູ້ຍິງນັ້ນກໍໄດ້ໄປຕາມທາງຂອງນາງແລະໄດ້ກິນ; ໃບຫນ້າຂອງນາງກໍບໍ່ໂສກເສົ້າອີກຕໍ່ໄປ.
19ພວກເຂົາໄດ້ຕື່ນຂຶ້ນແຕ່ເຊົ້າໆ ແລະ ນະມັສະການຕໍ່ພຣະພັກພຣະຢາເວ, ແລະພວກເຂົາກໍໄດ້ກັບເມືອເຮືອນຂອງພວກເຂົາຢູ່ຣາມາ.
ເອນການາກໍໄດ້ຫລັບນອນກັບຮັນນາເມຍຂອງລາວ, ແລະພຣະຢາເວກໍໄດ້ລະນຶກເຖິງນາງ. 20ໃນເວລາຕໍ່ມາ, ຮັນນາກໍໄດ້ຖືພາ
ແລະໄດ້ເກີດລູກຊາຍຄົນຫນຶ່ງ. ນາງໄດ້ເອີ້ນຊື່ລາວວ່າຊາມູເອນ, ກ່າວວ່າ, "ເພາະວ່າຂ້ານ້ອຍໄດ້ຂໍລາວມາຈາກພຣະຢາເວ."
21ອີກເທື່ອຫນຶ່ງ, ເອນການາ ແລະທຸກຄົນໃນຄົວເຮືອນຂອງລາວໄດ້ກັບຂຶ້ນໄປເພື່ອຖວາຍສັດບູຊາແດ່ພຣະຢາເວເປັນປະຈໍາທຸກປີ
ແລະແກ້ຄໍາສາບານຂອງລາວ. 22ແຕ່ຮັນນາບໍ່ໄດ້ໄປ; ນາງໄດ້ເວົ້າກັບຜົວຂອງນາງວ່າ, "ຂ້ອຍຈະບໍ່ໄປຈົນກວ່າເດັກຈະອອກນົມກ່ອນ;
ແລ້ວຂ້ອຍຈະພາລາວໄປ, ເພື່ອວ່າລາວຈະໄດ້ປາກົດຕົວຕໍ່ຫນ້າພຣະຢາເວ ແລະ ຢູ່ທີ່ນັ້ນຕະຫລອດໄປ." 23ເອນການາ
ຜົວຂອງນາງກໍບອກນາງວ່າ, "ຈົ່ງເຮັດຕາມທີ່ເຈົ້າເຫັນວ່າດີສໍາລັບເຈົ້າເຖີ້ນ. ຖ້າຈົນຮອດຍາມທີ່ເຈົ້າໃຫ້ລາວອອກນົມກ່ອນ;
ຂໍພຽງແຕ່ພຣະຢາເວຢັ້ງຢືນຖ້ອຍຄໍາຂອງພຣະອົງ." ດ້ວຍເຫດນີ້ ຍິງນັ້ນກໍຢູ່ ແລະ ໄດ້ລ້ຽງດູລູກຂອງນາງຈົນກວ່ານາງໄດ້ໃຫ້ລາວອອກນົມ.
24ເມື່ອນາງໄດ້ໃຫ້ລາວອອກນົມແລ້ວ, ນາງໄດ້ພາລາວໄປພ້ອມກັບນາງ, ພ້ອມກັບງົວອາຍຸສາມປີໂຕຫນຶ່ງໄປນໍາ, ອາຫານຫນຶ່ງເອຟາ,
ແລະເຫລົ້າອະງຸ່ນຫນຶ່ງແກ້ວ, ແລະໄດ້ພາລາວໄປທີ່ພຣະວິຫານຂອງພຣະຢາເວໃນຊີໂລ. ບັດນີ້ ເດັກຄົນນັ້ນຍັງນ້ອຍຢູ່. 25ພວກເຂົາໄດ້ຂ້າງົວ,
ແລະ ພວກເຂົາພາເດັກໄປຫາເອລີ.
26ນາງໄດ້ກ່າວວ່າ, "ໂອ້, ເຈົ້ານາຍຂອງຂ້ານ້ອຍ! ຕາບໃດທີ່ທ່ານມີຊີວິດຢູ່, ເຈົ້ານາຍຂອງຂ້ານ້ອຍ, ຂ້ານ້ອຍຄືຍິງທີ່ໄດ້ຢືນຢູ່ບ່ອນນີ້ ຕໍ່ຫນ້າທ່ານ
ເພື່ອອະທິຖານຕໍ່ພຣະຢາເວ. 27ເພາະວ່າ ເດັກຄົນນີ້ທີ່ຂ້ານ້ອຍໄດ້ອະທິຖານ ແລະ ພຣະຢາເວໄດ້ປຣະທານຕາມຄໍາຮ້ອງຂໍ
ຕາມທີ່ຊຶ່ງຂ້ານ້ອຍໄດ້ຮ້ອງຂໍພຣະອົງ. 28ຂ້ານ້ອຍຂໍຖວາຍລາວແດ່ພຣະຢາເວ, ຕາບເທົ່າທີ່ລາວຍັງມີຊີວິດຢູ່ ລາວຖືກຖວາຍແດ່ພຣະຢາເວແລ້ວ."
ແລ້ວລາວກໍນະມັສະການພຣະຢາເວຢູ່ທີ່ນັ້ນ.

2 [1]ຮັນນາໄດ້ອະທິຖານ ແລະກ່າວວ່າ, "ຈິດໃຈຂອງຂ້ານ້ອຍຍິນດີໃນພຣະຢາເວ. ກຳລັງຂອງຂ້ານ້ອຍໄດ້ຮັບການຍົກຊູຂຶ້ນໃນພຣະຢາເວ.
ປາກຂອງຂ້ານ້ອຍໂອ້ອວດເຫນືອພວກສັດຕຣູຂອງຂ້ານ້ອຍ, ເພາະຂ້ານ້ອຍຍິນດີໃນການໄຖ່ຂອງພຣະອົງ.

[2]ບໍ່ມີໃຜບໍຣິສຸດດັ່ງພຣະຢາເວ, ເພາະວ່າບໍ່ມີໃຜປຽບເຫມືອນພຣະອົງ; ບໍ່ມີໃຜທີ່ດີເຫມືອນພຣະເຈົ້າຂອງພວກເຮົາ.
[3]ຢ່າອວດອ້າງອີກຕໍ່ໄປ; ຢ່າໃຫ້ຄວາມຈອງຫອງອອກມາຈາກປາກຂອງພວກເຈົ້າ. ເພາະພຣະຢາເວເປັນພຣະເຈົ້າແຫ່ງຄວາມຮອບຮູ້;
ໂດຍພຣະອົງການກະທຳທັງຫລາຍຈະໄດ້ຮັບການຊັ່ງຊາ.[4]ຄັນທະນູຂອງຊາຍທີ່ຍິ່ງໃຫຍ່ກໍຫັກ,
ແຕ່ຄົນເຫລົ່ານັ້ນທີ່ໂຊເຊກໍໄດ້ຮັບການເສີມກຳລັງເຫມືອນສາຍເອວ.
[5]ບັນດາຄົນທີ່ເຄີຍກິນອີ່ມກໍຕ້ອງອອກຮັບຈ້າງຫາອາຫານ; ບັນດາຄົນເຫລົ່ານັ້ນທີ່ອຶດຢາກກໍຢຸດອຶດຢາກ.
ແມ່ນແຕ່ຄົນທີ່ເຫັນເປັນຫມັນກໍເກີດລູກຊາຍເຈັດຄົນ, ແຕ່ຜູ້ຍິງທີ່ມີລູກຫລາຍກໍອ່ອນແຮງໄປ.
[6]ພຣະຢາເວຂ້າ ແລະ ຊົງໃຫ້ມີຊີວິດ. ພຣະອົງຊົງນຳໄປເຖິງແດນຄົນຕາຍ ແລະ ໃຫ້ເປັນຄືນມາ.
[7]ພຣະຢາເວຊົງເຮັດໃຫ້ປະຊາຊົນບາງຄົນຍາກຈົນ ແລະ ເຮັດໃຫ້ບາງຄົນຮັ່ງມີ. ພຣະອົງຊົງເຮັດໃຫ້ຖ່ອມລົງ ແລະ ຊົງຍົກຂຶ້ນດ້ວຍ.
[8]ພຣະອົງຊົງຍົກຄົນຍາກຈົນຂຶ້ນຈາກຂີ້ຝຸ່ນດິນ. ພຣະອົງຊົງຍົກຄົນຂັດສົນຂຶ້ນຈາກກອງຂີ້ເຖົ່າ ເພື່ອເຮັດໃຫ້ພວກເຂົານັ່ງຮ່ວມກັບພວກເຈົ້ານາຍ
ແລະ ໃນບ່ອນນັ່ງອັນມີກຽດເປັນມໍຣະດົກ. ເພາະວ່າ ບັນດາເສົາແຫ່ງແຜ່ນດິນເປັນຂອງພຣະຢາເວ
ແລະພຣະອົງຊົງວາງຮາກຖານຂອງໂລກໄວ້ເທິງເສົາເຫລົ່ານັ້ນ.
[9]ພຣະອົງຈະຊົງດູແລການຕີນຂອງປະຊາຊົນທີ່ສັດຊື່ຂອງພຣະອົງ, ແຕ່ຄົນຊົ່ວຮ້າຍຈະຕ້ອງຖືກເຮັດໄປຖິ້ມໄວ້ໃນບ່ອນທີ່ງຽບໃນຄວາມມືດ,
ເພາະວ່າບໍ່ມີໃຜຈະຊະນະດ້ວຍກຳລັງ.
[10]ບັນດາ ຜູ້ຕໍ່ສູ້ພຣະຢາເວຈະຊົງຖືກທຸບໃຫ້ແຕກເປັນຕ່ອນໆ; ພຣະອົງຈະຊົງສົ່ງສຽງຕໍ່ສູ້ພວກເຂົາຈາກສະຫວັນ.
ພຣະຢາເວຈະຊົງພິພາກສາຄາວສຸດທ້າຍຂອງແຜ່ນດິນໂລກ; ພຣະອົງຈະຊົງປຣະທານກຳລັງແກ່ກະສັດຂອງພຣະອົງ ແລະ
ຈະເສີມກຳລັງຂອງຜູ້ທີ່ພຣະອົງເຈີມໄວ້."
[11]ແລ້ວເອນການາໄດ້ໄປຣາມາ, ໄປທີ່ເຮືອນຂອງລາວ. ສ່ວນເດັກນ້ອຍກໍໄດ້ຮັບໃຊ້ພຣະຢາເວຕໍ່ຫນ້າປະໂລຫິດເອລີ.
[12]ບັດນີ້ ບັນດາລູກຊາຍຂອງເອລີເປັນຄົນໄຮ້ຄ່າ. ພວກເຂົາບໍ່ຮູ້ຈັກກັບພຣະຢາເວ.[13]ປະເພນີຂອງພວກປະໂລຫິດຕໍ່ປະຊາຊົນເປັນຢ່າງນີ້
ເມື່ອມີຊາຍຄົນໃດຖວາຍເຄື່ອງສັດບູຊາ, ຄົນຮັບໃຊ້ຂອງປະໂລຫິດຈະເຂົ້າມາກັບສ້ອມສາມງ່າມໃນມືຂອງລາວ, ຂະນະທີ່ຊີ້ນກຳລັງຕົ້ມຢູ່ນັ້ນ.
[14]ລາວຈະເອົາສ້ອມສາມງ່າມແທງເຂົ້າໄປໃນຫມໍ້, ຫລື ຫມໍ້ຫູ, ຫລືຫມໍ້ຕົ້ມຂະຫນາດໃຫຍ່.
ສ້ອມທີ່ຖືກນຳຂຶ້ນມາຖືກສິ່ງໃດປະໂລຫິດກໍເອົາໄວ້ສຳລັບລາວ. ພວກເຂົາເຮັດເຊັ່ນນັ້ນຢູ່ຊີໂລ ແກ່ຊາວອິສະຣາເອນທຸກຄົນທີ່ມາທີ່ນັ້ນ.
[15]ຍິ່ງໄປກວ່ານັ້ນ, ກ່ອນທີ່ພວກເຂົາເຜົາໄຂມັນ, ຄົນຮັບໃຊ້ຂອງປະໂລຫິດໄດ້ເຂົ້າມາ,
ແລະເວົ້າກັບຊາຍທີ່ກຳລັງຖວາຍສັດບູຊາຢູ່ນັ້ນວ່າ,"ຂໍຊີ້ນໄປປີ້ງໃຫ້ປະໂລຫິດແດ່; ເພາະວ່າລາວຈະບໍ່ຮັບຊີ້ນຕົ້ມຈາກເຈົ້າ,
ແຕ່ເອົາຊີ້ນດິບເທົ່ານັ້ນ."[16]ຖ້າຊາຍຄົນນັ້ນກ່າວແກ່ລາວວ່າ, "ພວກເຂົາຈະຕ້ອງເຜົາໄຂມັນກ່ອນ, ແລະ
ແລ້ວຈຶ່ງເອົາໄປຕາມທີ່ທ່ານຕ້ອງການເທີ້ນ." ແລ້ວລາວຈະຕອບວ່າ, "ບໍ່ໄດ້, ເຈົ້າຈະຕ້ອງໃຫ້ຂ້ອຍດຽວນີ້; ຖ້າບໍ່ໃຫ້,
ຂ້ອຍກໍຈະໃຊ້ກຳລັງເອົາໄປ."[17]ບາບຂອງຄົນຫນຸ່ມທັງສອງນັ້ນ ໃຫຍ່ຫລວງ ຕໍ່ຫນ້າຂອງພຣະຢາເວ,
ເພາະວ່າພວກເຂົາໄດ້ຫມິ່ນປະຫມາດເຄື່ອງຖວາຍບູຊາແດ່ພຣະຢາເວ.
[18]ແຕ່ຊາມູເອນໄດ້ຮັບໃຊ້ຢູ່ຕໍ່ຫນ້າພຣະຢາເວ ເຫມືອນເດັກຄົນຫນຶ່ງທີ່ຮັດແອວດ້ວຍຜ້າເລນິນເອໂຟດ.[19]ແມ່ຂອງລາວໄດ້ຫຍິບເສື້ອຄຸມໂຕນ້ອຍໆ
ສຳລັບລາວທຸກໆປີ, ເມື່ອນາງຂຶ້ນໄປພ້ອມກັບຜົວຂອງນາງ ເພື່ອຖວາຍເຄື່ອງສັດບູຊາປະຈຳປີ.
[20]ເອລີໄດ້ອວຍພອນເອນການາ ແລະ ເມຍຂອງລາວເວົ້າວ່າ, "ຂໍພຣະຢາເວປຣະທານລູກຫລາຍຄົນໃຫ້ແກ່ທ່ານອີກໂດຍຜູ້ຍິງຄົນນີ້
ເພາະວ່າຄົນທີ່ນາງເຄີຍຂໍນັ້ນ ໄດ້ມອບຖວາຍໃຫ້ພຣະຢາເວ." ແລ້ວພວກເຂົາກໍໄດ້ກັບເມືອເຮືອນຂອງພວກເຂົາເອງ.
[21]ພຣະຢາເວໄດ້ຊ່ວຍຮັນນາ, ແລະ ນາງກໍຖືພາອີກເທື່ອຫນຶ່ງ. ນາງໄດ້ເກີດລູກຊາຍສາມຄົນ ແລະລູກສາວສອງຄົນ. ຂະນະທີ່,
ເດັກຊາຍຊາມູເອນກໍເຕີບໃຫຍ່ຂຶ້ນຕໍ່ພຣະພັກພຣະຢາເວ.
[22]ບັດນີ້ ເອລີກໍເຖົ້າຫລາຍແລ້ວ; ລາວໄດ້ຍິນເຖິງທຸກສິ່ງທີ່ລູກທັງສອງຂອງລາວກຳລັງເຮັດແກ່ຊາວອິສະຣາເອນທັງຫມົດ,
ແລະທີ່ພວກເຂົາຫລັບນອນກັບຜູ້ຍິງທີ່ຮັບໃຊ້ຢູ່ທີ່ທາງເຂົ້າຫໍເຕັນນັດພົບ.[23]ລາວກໍເວົ້າກັບພວກເຂົາວ່າ, "ເປັນຫຍັງພວກເຈົ້າຈຶ່ງເຮັດສິ່ງເຫລົ່ານີ້?
ເພາະຂ້ອຍໄດ້ຍິນກ່ຽວກັບການກະທຳອັນຊົ່ວຮ້າຍຈາກປະຊາຊົນທັງຫມົດເຫລົ່ານີ້."[24]ຢ່າເລີຍ, ລູກເອີຍ;
ເພາະວ່າມັນເປັນເລື່ອງທີ່ບໍ່ດີທີ່ເຮົາໄດ້ຍິນນັ້ນ. ພວກເຈົ້າເຮັດໃຫ້ປະຊາຊົນຂອງພຣະຢາເວບໍ່ເຊື່ອຟັງ.
[25]"ຖ້າຊາຍໃດເຮັດບາບຕໍ່ສູ້ກັບອີກຄົນຫນຶ່ງ, ພຣະເຈົ້າຈະຕັດສິນລາວ; ແຕ່ຖ້າຊາຍຄົນນັ້ນໄດ້ເຮັດບາບຕໍ່ສູ້ພຣະຢາເວ,
ໃຜຈະໂຕ້ແຍ້ງເພື່ອລາວໄດ້ຫລື?" ແຕ່ພວກເຂົາບໍ່ເຊື່ອຟັງບິດາຂອງພວກເຂົາ, ເພາະວ່າພຣະຢາເວຕັ້ງໃຈຈະຂ້າພວກເຂົາແລ້ວ.
[26]ເດັກຊາຍຊາມູເອນກໍເຕີບໃຫຍ່ຂຶ້ນ, ແລະ ເປັນທີ່ພໍພຣະທັຍຕໍ່ພຣະພັກພຣະຢາເວ ແລະຕໍ່ຫນ້າມະນຸດດ້ວຍ.
[27]ບັດນີ້ ຄົນຂອງພຣະເຈົ້າມາຫາເອລີ ແລະເວົ້າກັບລາວວ່າ, "ພຣະຢາເວກ່າວດັ່ງນີ້ວ່າ, 'ເຮົາບໍ່ໄດ້ເປີດເຜີຍເຮົາເອງໃຫ້ແກ່ບັນພະບຸຣຸດຂອງເຈົ້າ,
ເມື່ອພວກເຂົາຍັງຢູ່ໃນເອຢິບ ພາຍໃຕ້ການເປັນທາດຢູ່ໃນເຊື້ອສາຍຂອງຟາໂຣຫລື?[28]ເຮົາໄດ້ເລືອກລາວອອກຈາກເຜົ່າອິສະຣາເອນທັງຫມົດ
ໃຫ້ເປັນປະໂລຫິດຂອງເຮົາ, ເພື່ອຂຶ້ນໄປທີ່ແທ່ນບູຊາຂອງເຮົາ, ແລະ ເຜົາເຄື່ອງຫອມບູຊາ, ເພື່ອນຸ່ງເສື້ອເອໂຟດຕໍ່ຫນ້າເຮົາ.
ເຮົາໄດ້ມອບໃຫ້ແກ່ບັນພະບຸຣຸດຂອງເຈົ້າດ້ວຍເຄື່ອງຖວາຍທັງຫລາຍ ທີ່ປະຊາຊົນອິສະຣາເອນໄດ້ຖວາຍບູຊາດ້ວຍໄຟ.
[29]ເຫດໃດ, ພວກເຈົ້າຈຶ່ງດູຫມິ່ນເຄື່ອງຖວາຍບູຊາຂອງເຮົາ ແລະ ສິ່ງຂອງຖວາຍທີ່ເຮົາໄດ້ສັ່ງໄວ້ໃນບ່ອນທີ່ເຮົາສະຖິດຢູ່?
ເປັນຫຍັງພວກເຈົ້າໃຫ້ກຽດແກ່ລູກຊາຍທັງສອງຂອງເຈົ້າເຫນືອເຮົາ ໂດຍເຮັດໃຫ້ໂຕຂອງພວກເຈົ້າອ້ວນພີ
ດ້ວຍສ່ວນທີ່ດີທີ່ສຸດຂອງເຄື່ອງຖວາຍທຸກຢ່າງຈາກປະຊາຊົນອິສະຣາເອນຂອງເຮົາ?'[30]ເພາະສະນັ້ນ, ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ຊົງກ່າວວ່າ, 'ເຮົາໄດ້ສັນຍາວ່າເຊື້ອສາຍຂອງເຈົ້າ, ແລະເຊື້ອສາຍຂອງບັນດາບັນພະບຸຣຸດຂອງເຈົ້າຈະດຳເນີນຢູ່ຕໍ່ຫນ້າເຮົາເປັນນິດ.'
ແຕ່ບັດນີ້ພຣະຢາເວຊົງກ່າວວ່າ, 'ຂໍໃຫ້ການນັ້ນຫ່າງໄກໄປຈາກເຮົາ, ເພາະເຮົາຈະໃຫ້ກຽດແກ່ບັນດາຜູ້ທີ່ໃຫ້ກຽດເຮົາ,
ແຕ່ບັນດາຜູ້ທີ່ຫມິ່ນປະຫມາດເຮົາ ຈະຕົກຕ່ຳລົງ.


generated on Tue Jun 17 19:01:42 2025

[31]ເບິ່ງແມ໋, ວັນເຫລົ່ານັ້ນຈະມາເຖິງ ເມື່ອເຮົາຈະຕັດກຳລັງຂອງພວກເຈົ້າອອກ ແລະ ກຳລັງຂອງເຊື້ອສາຍຂອງພໍ່ເຈົ້າ,
ເພື່ອຈະບໍ່ມີຄົນເຖົ້າໃນເຊື້ອສາຍຂອງພວກເຈົ້າ.[32]ເຈົ້າຈະເຫັນຄວາມທຸກຮ້ອນໃນບ່ອນຢູ່ຂອງເຮົາ.
ແມ່ນວ່າສິ່ງທີ່ດີຈະມອບໃຫ້ແກ່ອິສະຣາເອນກໍຕາມ, ແຕ່ຈະບໍ່ມີຄົນເຖົ້າໃນເຊື້ອສາຍຂອງພວກເຈົ້າ.[33]ມີໃຜໃນພວກເຈົ້າ
ຊຶ່ງເຮົາບໍ່ໄດ້ຕັດເສຍຈາກແທ່ນບູຊາຂອງເຮົາ, ເຮົາຈະໃຫ້ດວງຕາທັງສອງຂອງພວກເຈົ້າຫລົ້ມແຫລວໄປ,
ແລະເຮົາຈະເຮັດໃຫ້ເກີດຄວາມໂສກເສົ້າໃນຊີວິດຂອງພວກເຈົ້າ. ທຸກຄົນທີ່ເກີດໃນເຊື້ອສາຍຂອງພວກເຈົ້າຈະຕາຍ.
[34]ສິ່ງນີ້ຈະເປັນຫມາຍສຳຄັນແກ່ພວກເຈົ້າ ຊຶ່ງຈະບັງເກີດຂຶ້ນແກ່ລູກຊາຍທັງສອງຂອງເຈົ້າ, ຄືໂຮບນີ ແລະ ຟີເນຫັດ:
ພວກເຂົາຈະຕາຍໃນວັນດຽວກັນ.[35]ເຮົາຈະຕັ້ງຄົນເປັນປະໂລຫິດທີ່ສັດຊື່ຂອງເຮົາຂຶ້ນ ຜູ້ທີ່ຈະເຮັດຕາມສິ່ງທີ່ເຮົາມີຢູ່ໃນໃຈ
ແລະໃນຈິດວິນຍານຂອງເຮົາ. ເຮົາຈະສ້າງເຊື້ອສາຍທີ່ຫມັ້ນຄົງໃຫ້ລາວ; ແລະ
ລາວຈະດຳເນີນຢູ່ຕໍ່ຫນ້າກະສັດຜູ້ທີ່ເຮົາໄດ້ເຈີມຕັ້ງໄວ້ຕະຫລອດໄປ.
[36]ທຸກຄົນທີ່ຍັງເຫລືອຢູ່ໃນເຊື້ອສາຍຂອງເຈົ້າຈະມາ ແລະຂາບໄຫວ້ລາວ, ຮ້ອງຂໍເງິນອັນຫນຶ່ງ ແລະເຂົ້າຈີກ້ອນຫນຶ່ງ, ແລະ ຈະເວົ້າວ່າ,
"ຂໍທ່ານກະຣຸນາຕັ້ງຂ້ານ້ອຍໄວ້ໃນຕຳແຫນ່ງປະໂລຫິດຈັກເທື່ອຫນຶ່ງເຖີ້ນ ເພື່ອຂ້ານ້ອຍຈະໄດ້ກິນເສດເຂົ້າຈີແດ່."'"


generated on Tue Jun 17 19:01:42 2025

# 3

[1]ເດັກຊາຍຊາມູເອນໄດ້ຮັບໃຊ້ພຣະຢາເວພາຍໃຕ້ເອລີ. ໃນສະໄໝນັ້ນມີຖ້ອຍຄຳຂອງພຣະຢາເວມາເຖິງແຕ່ຫນ້ອຍຫລາຍ;
ຊຶ່ງບໍ່ມີນິມິດທີ່ທຳນວາຍເປັນປະຈຳ.[2]ໃນເວລານັ້ນ, ເມື່ອເອລີ, ຜູ້ຊຶ່ງດວງຕາໄດ້ເລີ່ມມົວ ດັ່ງນັ້ນລາວບໍ່ສາມາດເບິ່ງເຫັນໄດ້ຊັດເຈນ,
ກຳລັງຈະນອນລົງບ່ອນນອນຂອງລາວ.[3]ຕະກຽງຂອງພຣະເຈົ້າຍັງບໍ່ດັບ,
ແລະຊາມູເອນກຳລັງຈະຫລົ້ມຕົວລົງນອນຫລັບຢູ່ໃນພຣະວິຫານຂອງພຣະຢາເວ ໃນບ່ອນທີ່ຫີບຂອງພຣະເຈົ້າຢູ່.[4]ພຣະຢາເວຊົງເອີ້ນຊາມູເອນ,
ຜູ້ຊຶ່ງເວົ້າວ່າ, "ຂ້ານ້ອຍຢູ່ທີ່ນີ້."

[5]ຊາມູເອນແລ່ນໄປຫາເອລີ ແລະເວົ້າວ່າ, "ຂ້ານ້ອຍຢູ່ທີ່ນີ້, ເພາະວ່າທ່ານໄດ້ເອີ້ນຂ້ານ້ອຍ." ເອລີໄດ້ຕອບວ່າ; "ຂ້ອຍບໍ່ໄດ້ເອີ້ນເຈົ້າ;
ຈົ່ງກັບໄປນອນສາ. ດັ່ງນັ້ນ ຊາມູເອນກັບໄປ ແລະນອນລົງ.[6]ພຣະຢາເວຊົງເອີ້ນອີກເທື່ອຫນຶ່ງວ່າ, "ຊາມູເອນ." ຊາມູເອນກໍໄດ້ລຸກຂຶ້ນອີກເທື່ອຫນຶ່ງ
ແລະໄປຫາເອລີ ແລະເວົ້າວ່າ, "ຂ້ານ້ອຍຢູ່ທີ່ນີ້, ເພາະເຫດທີ່ທ່ານເອີ້ນຂ້ານ້ອຍ." ເອລີໄດ້ຕອບວ່າ, "ລູກເອີຍ; ຂ້ອຍບໍ່ໄດ້ເອີ້ນເຈົ້າ,
ຈົ່ງກັບໄປນອນອີກສາ."
[7]ຕອນນັ້ນ ຊາມູເອນບໍ່ເຄີຍມີປະສົບການໃດໆເລີຍກັບພຣະຢາເວ, ຫລືຍັງບໍ່ເຄີຍມີຖ້ອຍຄຳຈາກພຣະຢາເວໄດ້ຊົງເປີດເຜີຍແກ່ລາວເລີຍ.
[8]ພຣະຢາເວຊົງເອີ້ນຊາມູເອນອີກເທື່ອ ເປັນເທື່ອທີ່ສາມ. ອີກເທື່ອຫນຶ່ງຊາມູເອນກໍລຸກຂຶ້ນໄປຫາເອລີ ແລະເວົ້າວ່າ, "ຂ້ານ້ອຍຢູ່ທີ່ນີ້,
ເພາະທ່ານໄດ້ເອີ້ນຂ້ານ້ອຍ." ແລ້ວເອລີຈຶ່ງໄດ້ຮູ້ວ່າ ພຣະຢາເວໄດ້ຊົງເອີ້ນເດັກນັ້ນ.
[9]ແລ້ວເອລີຈຶ່ງເວົ້າກັບຊາມູເອນວ່າ, "ຈົ່ງໄປ ແລະນອນລົງອີກ; ຖ້າພຣະອົງເອີ້ນເຈົ້າອີກ, ເຈົ້າຈົ່ງເວົ້າວ່າ, 'ຂໍໂຜດຊົງກ່າວເຖີ້ນ, ພຣະຢາເວ,
ເພາະຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່.'" ດັ່ງນັ້ນ ຊາມູເອນຈຶ່ງກັບໄປ ແລະ ນອນໃນບ່ອນນອນຂອງລາວອີກເທື່ອຫນຶ່ງ.
[10]ພຣະຢາເວໄດ້ມາ ແລະຢືນຢູ່; ພຣະອົງຊົງເອີ້ນຄືກັນກັບຄັ້ງກ່ອນໆວ່າ, "ຊາມູເອນ, ຊາມູເອນ." ແລ້ວຊາມູເອນຕອບວ່າ, "ຂໍໂຜດຊົງກ່າວເຖີ້ນ,
ເພາະຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່."[11]ພຣະຢາເວຊົງກ່າວກັບຊາມູເອນວ່າ, "ເບິ່ງແມ໋, ເຮົາກຳລັງຈະເຮັດສິ່ງຫນຶ່ງໃນອິສະຣາເອນ
ຊຶ່ງຫູຂອງທຸກຄົນຈະໄດ້ຍິນກໍຈະອື້ໄປ.
[12]ໃນວັນນັ້ນ ເຮົາຈະເຮັດຕໍ່ເອລີທຸກສິ່ງທີ່ເຮົາໄດ້ກ່າວໄວ້ກ່ຽວກັບ ເຊື້ອສາຍຂອງເອລີ, ຕັ້ງແຕ່ຕົ້ນຈົນເຖິງທີ່ສຸດທ້າຍ.[13]ເຮົາໄດ້ບອກກັບລາວວ່າ
ເຮົາກຳລັງຈະພິພາກສາເຊື້ອສາຍຂອງລາວອີກຄັ້ງ ສຳລັບການບາບທີ່ລາວໄດ້ຮູ້ເລື່ອງແລ້ວ,
ເພາະວ່າລູກຊາຍທັງຫລາຍຂອງລາວໄດ້ນຳການສາບແຊ່ງມາເຫນືອພວກເຂົາ ແລະ ລາວກໍບໍ່ໄດ້ຢຸດຢັ້ງພວກເຂົາ.[14]ເພາະວ່າ ສິ່ງນີ້ແຫລະ
ທີ່ເຮົາໄດ້ສາບານຕໍ່ເຊື້ອສາຍຂອງລາວວ່າ ຄວາມບາບທັງຫລາຍໃນເຊື້ອສາຍຂອງລາວ ຈະບໍ່ໄດ້ຮັບການຍົກບາບໂດຍການຖວາຍເຄື່ອງສັດບູຊາ
ຫລື ເຄື່ອງຖວາຍບູຊາໃດໆທັງນັ້ນ."
[15]ຊາມູເອນນອນລົງຈົນຮອດຕອນເຊົ້າ; ແລ້ວລາວໄດ້ເປີດປະຕູພຣະວິຫານຂອງພຣະຢາເວ. ແຕ່ຊາມູເອນຢ້ານທີ່ຈະບອກໃຫ້ເອລີກ່ຽວກັບນິມິດ.
[16]ແລ້ວເອລີກໍເອີ້ນຊາມູເອນ ແລະ ເວົ້າວ່າ, "ຊາມູເອນ, ລູກເອີຍ." ຊາມູເອນໄດ້ຕອບວ່າ "ຂ້ານ້ອຍຢູ່ທີ່ນີ້."
[17]ລາວໄດ້ເວົ້າວ່າ, "ເລື່ອງຫຍັງທີ່ພຣະອົງໄດ້ບອກກັບເຈົ້າ? ຂໍຢ່າປິດບັງໄວ້ຈາກຂ້ອຍເລີຍ. ຂໍພຣະເຈົ້າເຮັດຢ່າງນັ້ນແກ່ເຈົ້າ, ແລະ
ໃຫ້ຫລາຍກວ່ານັ້ນ, ຖ້າເຈົ້າປິດບັງສິ່ງໃດໄວ້ຈາກຂ້ອຍ ໃນເລື່ອງທັງຫມົດທີ່ພຣະອົງຊົງບອກແກ່ເຈົ້າ."[18]ຊາມູເອນຈຶ່ງເລົ່າໃຫ້ລາວຟັງທຸກຢ່າງ;
ລາວບໍ່ໄດ້ປິດບັງຫຍັງໄວ້ຈາກລາວເລີຍ. ເອລີໄດ້ກ່າວວ່າ, "ພຣະອົງຄືພຣະຢາເວ. ຂໍພຣະອົງເຮັດໃນສິ່ງທີ່ເຫັນວ່າດີຕໍ່ພຣະອົງເຖີ້ນ."
[19]ຊາມູເອນເຕີບໃຫຍ່ຂຶ້ນ, ແລະພຣະຢາເວສະຖິດກັບລາວ ແລະບໍ່ໃຫ້ຄຳທຳນວາຍທັງຫມົດຂອງລາວເປັນຄວາມຈິງ.[20]ຊາວອິສະຣາເອນທັງຫມົດ
ຕັ້ງແຕ່ດານເຖິງເບເອຊາບາກໍໄດ້ຮູ້ວ່າ ຊາມູເອນໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ທຳນວາຍຂອງພຣະຢາເວ.[21]ພຣະຢາເວປາກົດອີກເທື່ອຫນຶ່ງທີ່ຊີໂລ,
ເພາະພຣະອົງສະແດງພຣະອົງເອງແກ່ຊາມູເອນ ທີ່ຊີໂລໂດຍພຣະທັມຂອງພຣະອົງ.

 generated on Tue Jun 17 19:01:42 2025

4 [1]ຖ້ອຍຄຳຂອງຊາມູເອນໄດ້ມາເຖິງຊາວອິສະຣາເອນທັງຫມົດ. ບັດນີ້ ອິສະຣາເອນໄດ້ຍົກກອງທັບອອກໄປເຮັດສົງຄາມກັບພວກຟີລິສະຕິນ.
ພວກເຂົາໄດ້ຕັ້ງຄ້າຍທີ່ເອເບເຊບາ, ແລະ ຄົນຟີລິສະຕິນກໍໄດ້ຕັ້ງຄ້າຍຢູ່ໃນອາເຟກ.
[2]ພວກຟີລິສະຕິນຈັດພົນຮົບເປັນແຖວເຂົ້າມາຕໍ່ສູ້ກັບອິສະຣາເອນ. ເມື່ອສົງຄາມແຜ່ຂະຫຍາຍອອກໄປ,
ອິສະຣາເອນໄດ້ເສຍຊັຍຊະນະໃຫ້ແກ່ພວກຟີລິສະຕິນ, ຜູ້ໄດ້ຂ້າສີ່ພັນຄົນໃນສະຫນາມຮົບ.

[3]ເມື່ອພວກປະຊາຊົນກັບມາສູ່ຄ້າຍພັກ, ພວກຜູ້ໃຫຍ່ຂອງອິສະຣາເອນວ່າ, "ເປັນຫຍັງພຣະຢາເວເຮັດໃຫ້ພວກເຮົາ
ພ່າຍແພ້ຕໍ່ຫນ້າພວກຟີລິສະຕິນໃນວັນນີ້? ໃຫ້ພວກເຮົານຳເອົາຫີບພັນທະສັນຍາຂອງພຣະຢາເວຈາກເມືອງຊີໂລມາທີ່ນີ້,
ເພື່ອວ່າຫີບພັນທະສັນຍາຈະໄດ້ຢູ່ກັບພວກເຮົາທີ່ນີ້, ເພື່ອຫີບນັ້ນຈະຊ່ວຍພວກເຮົາປອດພັຍຈາກມືຂອງສັດຕຣູທັງຫລາຍຂອງພວກເຮົາ."[4]ດັ່ງນັ້ນ
ປະຊາຊົນຈຶ່ງໄດ້ສົ່ງຜູ້ຊາຍຫລາຍຄົນໄປທີ່ເມືອງຊີໂລ; ຈາກທີ່ນັ້ນພວກເຂົາໄດ້ນຳເອົາຫີບພັນທະສັນຍາຂອງພຣະຢາເວຈອມໂຍທາ,
ຜູ້ນັ່ງຢູ່ເຫນືອເຄຣູບ. ລູກທັງສອງຂອງເອລີ, ຄືໂຮບນີ ແລະຟີເນຫັດ, ກໍໄດ້ຢູ່ກັບຫີບພັນທະສັນຍາຂອງພຣະເຈົ້າ.
[5]ເມື່ອຫີບພັນທະສັນຍາຂອງພຣະຢາເວມາເຖິງຄ້າຍ, ປະຊາຊົນອິສະຣາເອນທັງຫມົດກໍໂຫ່ຮ້ອງສຽງດັງ, ແລະແຜ່ນດິນກໍດັງກ້ອງສະຫນັ່ນ.
[6]ເມື່ອຊາວຟີລິສະຕິນໄດ້ຍິນສຽງໂຫ່ຮ້ອງ, ພວກເຂົາກໍໄດ້ເວົ້າວ່າ,
"ສຽງໂຫ່ຮ້ອງອຶກກະທຶກໃນຄ້າຍຂອງພວກເຮັບເຣີນັ້ນຫມາຍຄວາມວ່າຢ່າງໃດກັນ?"
ແລ້ວພວກເຂົາກໍໄດ້ຮູ້ວ່າຫີບພັນທະສັນຍາຂອງພຣະຢາເວໄດ້ມາຂ້າງໃນຄ້າຍແລ້ວ.
[7]ຊາວຟີລິສະຕິນກໍຢ້ານ; ພວກເຂົາເວົ້າວ່າ, "ພຣະເຈົ້າອົງຫນຶ່ງໄດ້ມາທີ່ຄ້າຍແລ້ວ." ພວກເຂົາເວົ້າວ່າ, "ວິບັດແກ່ພວກເຮົາ!
ບໍ່ເຄີຍເກີດເລື່ອງຢ່າງນີ້ມາກ່ອນເລີຍ![8]ວິບັດແກ່ພວກເຮົາ! ໃຜຈະຊ່ວຍເອົາພວກເຮົາຈາກອຳນາດຂອງພະເຈົ້າເຫລົ່ານີ້ໄດ້?
ພະເຈົ້າເຫລົ່ານີ້ເປັນຜູ້ທີ່ໄດ້ບຸກໂຈມຕີຊາວເອຢິບ ດ້ວຍພັຍພິບັດທີ່ແຕກຕ່າງກັນຫລາຍຊະນິດໃນຖິ່ນແຫ້ງແລ້ງກັນດານ.[9]ຈົ່ງກ້າຫານເຖີ້ນ,
ແລະຈົ່ງເປັນລູກຜູ້ຊາຍ, ເຈົ້າທັງຫລາຍຊາວຟີລິສະຕິນເອີຍ, ຫລື ພວກເຈົ້າຈະກາຍເປັນທາດຂອງຊາວເຮັບເຣີ,
ດັ່ງທີ່ພວກເຂົາເຄີຍເປັນທາດພວກເຈົ້າ. ຈົ່ງເປັນລູກຜູ້ຊາຍ, ແລະຈົ່ງຕໍ່ສູ້."
[10]ຄົນຟີລິສະຕິນຈຶ່ງໄດ້ສູ້ຮົບ, ແລະອິສະຣາເອນກໍໄດ້ພ່າຍແພ້. ທຸກຄົນກໍໄດ້ຫນີໄປຍັງບ້ານຂອງລາວ, ແລະມີການຂ້າຟັນກັນຢ່າງຫນັກ;
ມີທະຫານຣາບຂອງອິສະຣາເອນຕາຍໄປສາມສິບພັນຄົນ.[11]ຫີບພັນທະສັນຍາຂອງພຣະເຈົ້າກໍຖືກຍຶດໄປ, ແລະລູກຊາຍທັງສອງຂອງເອລີ, ໂຮບນີ
ແລະຟີເນຫັດ, ກໍຕາຍດ້ວຍ.
[12]ຜູ້ຊາຍເຜົ່າເບັນຢາມິນຄົນຫນຶ່ງໄດ້ແລ່ນມາຈາກສະຫນາມຮົບ ແລະມາເຖິງຊີໂລໃນວັນດຽວກັນນັ້ນ, ມາເຖິງດ້ວຍເສື້ອຜ້າຂາດ
ແລະຂີ້ຝຸ່ນດິນກໍຢູ່ເທິງຫົວຂອງລາວ.[13]ເມື່ອລາວໄດ້ມາເຖິງ, ເອລີກຳລັງນັ່ງຢູ່ບ່ອນນັ່ງຂອງລາວຂ້າງຖະຫນົນ ລໍຖ້າເບິ່ງ
ເພາະຈິດໃຈຂອງທ່ານຢ້ານກ່ຽວກັບເລື່ອງຫີບພັນທະສັນຍາຂອງພຣະເຈົ້າ. ເມື່ອຜູ້ຊາຍຄົນນັ້ນໄດ້ເຂົ້າມາໃນເມືອງ ແລະໄດ້ບອກຂ່າວ, ແລະ
ຊາວເມືອງທັງຫມົດກໍຮ້ອງໄຫ້ສຽງດັງ.
[14]ເມື່ອເອລີໄດ້ຍິນສຽງຮ້ອງດັ່ງເຊັ່ນນັ້ນ, ກໍໄດ້ເວົ້າວ່າ, "ສຽງອຶກກະທຶກນີ້ເປັນສຽງຫຍັງກັນ?" ຜູ້ຊາຍຄົນນັ້ນກໍຮີບເຂົ້າມາ ແລະບອກເອລີ.[15]ບັດນີ້
ເອລີອາຍຸໄດ້ເກົ້າສິບແປດປີ; ດວງຕາຂອງລາວກໍມົວ, ແລະລາວບໍ່ສາມາດເບິ່ງເຫັນແລ້ວ.
[16]ຜູ້ຊາຍຄົນນັ້ນໄດ້ເວົ້າກັບເອລີວ່າ, "ຂ້ານ້ອຍເປັນຄົນທີ່ມາຈາກສະຫນາມຮົບ. ຂ້ານ້ອຍຫນີມາຈາກການສູ້ຮົບວັນນີ້." ເອລີກໍໄດ້ເວົ້າວ່າ,
"ລູກເອີຍ, ເປັນແນວໃດແດ່?"[17]ຜູ້ຊາຍຄົນທີ່ມາບອກຂ່າວຕອບ ແລະເວົ້າວ່າ, "ອິສະຣາເອນໄດ້ຫນີຈາກຊາວຟີລິສະຕິນ. ເຊັ່ນດຽວກັນ,
ມີການຂ້າຟັນກັນຢ່າງຫນັກທ່າມກາງປະຊາຊົນ. ເຊັ່ນດຽວກັນ, ລູກຊາຍທັງສອງຄົນຂອງເຈົ້າ, ຄືໂຮບນີ ແລະຟີເນຫັດ, ກໍຕາຍແລ້ວ,
ແລະຫີບພັນທະສັນຍາຂອງພຣະເຈົ້າກໍຖືກຍຶດໄປແລ້ວ."
[18]ເມື່ອລາວໄດ້ເວົ້າເຖິງຫີບພັນທະສັນຍາຂອງພຣະເຈົ້າ, ເອລີກໍໄດ້ຫງາຍຫລັງຕົກຈາກບ່ອນນັ່ງທີ່ຢູ່ຂ້າງປະຕູ ຄໍຂອງລາວກໍຫັກ, ແລະ
ລາວກໍຂາດໃຈຕາຍ, ເພາະລາວເຖົ້າຫລາຍແລ້ວ ແລະຕຸ້ຍໂພດ. ລາວໄດ້ຕັດສິນອິສະຣາເອນສີ່ສິບປີ.
[19]ບັດນີ້ລູກໄພ້ຂອງລາວ, ຄືເມຍຂອງຟີເນຫັດກໍຖືພາ, ແລະໃກ້ກຳນົດເກີດລູກແລ້ວ.
ເມື່ອນາງໄດ້ຍິນຂ່າວວ່າຫີບພັນທະສັນຍາຂອງພຣະເຈົ້າຖືກຍຶດໄປ ແລະພໍ່ຜົວຂອງນາງ ແລະ ຜົວຂອງນາງກໍໄດ້ຕາຍໄປ, ນາງກໍໄດ້ຄຸກເຂົ່າລົງ
ແລະເກີດລູກ, ແຕ່ຄວາມເຈັບປວດສາຫັດເກີດຂຶ້ນຖ້ວມໃຈນາງ.[20]ເມື່ອນາງກຳລັງຈະຕາຍ ພວກຜູ້ຍິງທີ່ເຝົ້າເບິ່ງນາງໄດ້ເວົ້າວ່າ, "ຢ່າຢ້ານເລີຍ,
ເພາະເຈົ້າຫາກໍໄດ້ລູກຄົນຫນຶ່ງ." ແຕ່ນາງບໍ່ໄດ້ຕອບ ຫລື ໃສ່ໃຈກັບເລື່ອງທີ່ພວກເຂົາໄດ້ເວົ້າກັບຫົວໃຈ.
[21]ນາງໄດ້ຕັ້ງຊື່ເດັກນັ້ນວ່າ ອີຄາໂບດ, ເວົ້າວ່າ, "ພຣະສະຫງ່າຣາສີໄດ້ພາກຈາກອິສະຣາເອນແລ້ວ!"
ເພາະຫີບພັນທະສັນຍາຂອງພຣະເຈົ້າໄດ້ຖືກຍຶດໄປ, ແລະເພາະພໍ່ຜົວຂອງນາງ ແລະ ຜົວຂອງນາງ.[22]ນາງເວົ້າວ່າ,
"ພຣະສະຫງ່າຣາສີໄດ້ພາກໄປຈາກອິສະຣາເອນແລ້ວ, ເພາະຫີບພັນທະສັນຍາຂອງພຣະເຈົ້າໄດ້ຖືກຍຶດໄປແລ້ວ."


generated on Tue Jun 17 19:01:42 2025

5 [1]ບັດນີ້ ຊາວຟີລິສະຕິນໄດ້ຍຶດຫີບພັນທະສັນຍາຂອງພຣະເຈົ້າໄປ, ແລະພວກເຂົາໄດ້ນຳໄປຈາກເອເບເຊບາໄປຍັງອາສະໂດດ.
[2]ຄົນຟີລິສະຕິນກໍໄດ້ນຳຫີບພັນທະສັນຍາຂອງພຣະເຈົ້າ, ເຂົ້າໄປໄວ້ໃນວິຫານຂອງພະດາໂກນ, ແລະວາງຫີບໄວ້ຂ້າງພະດາໂກນ.
[3]ເມື່ອປະຊາຊົນຊາວອາສະໂດດ ຕື່ນແຕ່ເຊົ້າໃນວັນຕໍ່ມາ, ເບິ່ງແມ໋, ພະດາໂກນກໍໄດ້ລົ້ມລົງເຖິງພື້ນດິນຕໍ່ພຣະພັກພຣະຢາເວ. ສະນັ້ນ
ພວກເຂົາໄດ້ເອົາພະດາໂກນ ແລະ ຕັ້ງຂຶ້ນໃນບ່ອນຂອງມັນອີກເທື່ອຫນຶ່ງ.

[4]ແຕ່ເມື່ອພວກເຂົາໄດ້ຕື່ນໃນເຊົ້າມື້ຕໍ່ມາ, ເບິ່ງແມ໋ ພະດາໂກນໄດ້ຂວ້ຳຫນ້າລົງເຖິງດິນຕໍ່ຫນ້າຫີບພັນທະສັນຍາຂອງພຣະຢາເວ.
ຫົວຂອງພະດາໂກນ ແລະມືທັງສອງຂ້າງກໍໄດ້ແຕກຫັກຢູ່ທາງເຂົ້າປະຕູ. ເຫລືອແຕ່ລຳໂຕຂອງພະດາໂກນທີ່ຍັງຢູ່.[5]ນີ້ຄືເຫດຜົນວ່າເປັນຫຍັງ,
ແມ່ນແຕ່ທຸກວັນນີ້, ພວກປະໂລຫິດຂອງພະດາໂກນ ແລະ ທຸກຄົນທີ່ເຂົ້າໄປໃນວິຫານຂອງພະດາໂກນ
ຈຶ່ງບໍ່ຢຽບທາງເຂົ້າປະຕູວິຫານຂອງພະດາໂກນທີ່ເມືອງອາສະໂດດ.
[6]ພຣະຫັດຂອງພຣະຢາເວໄດ້ຢຽດອອກເຫນືອປະຊາຊົນຊາວອາສະໂດດຢ່າງຫນັກ. ພຣະອົງໄດ້ທຳລາຍພວກເຂົາ
ແລະເຮັດໃຫ້ພວກເຂົາທຸກທໍຣະມານດ້ວຍຝີຕ່າງໆ, ທັງໃນເມືອງອາສະໂດດ ແລະອານາເຂດທັງຫມົດຂອງເມືອງນັ້ນ.
[7]ເມື່ອຊາວເມືອງອາສະໂດດໄດ້ຮູ້ວ່າມີຫຍັງກຳລັງເກີດຂຶ້ນກັບພວກເຂົາ,
ພວກເຂົາເວົ້າວ່າ,"ຫີບພັນທະສັນຍາຂອງພຣະເຈົ້າແຫ່ງອິສະຣາເອນຈະບໍ່ຢູ່ກັບພວກເຮົາ, ເພາະວ່າ ພຣະຫັດຂອງພຣະອົງລົງໂທດພວກເຮົາ
ແລະ ພະດາໂກນພະເຈົ້າຂອງພວກເຮົາຢ່າງຫນັກ."
[8]ດັ່ງນັ້ນ ພວກເຂົາຈຶ່ງໄດ້ໃຊ້ຄົນໄປ ແລະ ໄດ້ເອີ້ນປະຊຸມພວກເຈົ້ານາຍທັງຫມົດຂອງຊາວຟີລິສະຕິນ; ພວກເຂົາເວົ້າກັນວ່າ,
"ເຮົາຈະເຮັດຢ່າງໃດດີກັບຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນ?" ພວກເຂົາຕອບວ່າ,
"ໃຫ້ເຮົາຍ້າຍຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນໄປທີ່ເມືອງກາດ." ດັ່ງນັ້ນ
ພວກເຂົາຈຶ່ງຍ້າຍຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນໄປທີ່ນັ້ນ.[9]ແຕ່ພາຍຫລັງ ເມື່ອພວກເຂົາຍ້າຍຫີບວົນວຽນໄປ,
ພຣະຫັດຂອງພຣະຢາເວກໍໄດ້ລົງໂທດເມືອງນັ້ນ, ເຮັດໃຫ້ເກີດຄວາມວຸ້ນວາຍຢ່າງໃຫຍ່ຫລວງ. ພຣະອົງໄດ້ທໍຣະມານຊາວເມືອງນັ້ນ,
ທັງຜູ້ເລັກນ້ອຍ ແລະ ພວກເຈົ້ານາຍທັງຫລາຍ; ແລະຝີຕ່າງໆກໍໄດ້ແຕກເທິງຮ່າງກາຍຂອງພວກເຂົາ.
[10]ດັ່ງນັ້ນ ພວກເຂົາຈຶ່ງສົ່ງຫີບພັນທະສັນຍາຂອງພຣະເຈົ້າໄປຍັງເມືອງເອກໂຣນ.
ແຕ່ທັນທີທີ່ຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນມາເຖິງເມືອງເອກໂຣນແລ້ວ, ຊາວເມືອງເອກໂຣນກໍໄດ້ຮ້ອງສຽງດັງວ່າ,
"ພວກເຂົາໄດ້ຍ້າຍຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນມາໃຫ້ເຮົາເພື່ອຂ້າພວກເຮົາ ແລະ ປະຊາຊົນຂອງພວກເຮົາດ້ວຍ."
[11]ດັ່ງນັ້ນພວກເຂົາຈຶ່ງໄດ້ສົ່ງຄົນໄປເອີ້ນປະຊຸມພວກເຈົ້ານາຍທັງຫມົດຂອງຊາວຟີລິສະຕິນ; ພວກເຂົາເວົ້າກັນວ່າ,
"ຈົ່ງສົ່ງຫີບພັນທະສັນຍາຂອງພຣະເຈົ້າຂອງຊາວອິສະຣາເອນໄປເສຍ, ແລະໃຫ້ຫີບນັ້ນກັບໄປບ່ອນເກົ່າ,
ເພາະວ່າມີຄວາມແຕກຕື່ນຢູ່ທົ່ວທັງເມືອງ; ພຣະຫັດຂອງພຣະເຈົ້າໄດ້ລົງໂທດຢ່າງຫນັກຢູ່ໃນບ່ອນນັ້ນ.
[12]ຊາວເມືອງທີ່ຍັງບໍ່ຕາຍກໍຖືກທໍຣະມານດ້ວຍຝີຕ່າງໆ, ແລະ ສຽງຮ້ອງໄຫ້ຂອງເມືອງກໍໄດ້ຂຶ້ນໄປເຖິງຟ້າສະຫວັນ.

 generated on Tue Jun 17 19:01:42 2025

6 [1]ບັດນີ້ ຫີບພັນທະສັນຍາຂອງພຣະຢາເວໄດ້ຢູ່ໃນດິນແດນຂອງຊາວຟີລິສະຕິນເຈັດເດືອນ.
[2]ແລ້ວຄົນຟີລິສະຕິນກໍໄດ້ເອີ້ນປະຊຸມພວກປະໂລຫິດ ແລະພວກໂຫຣາຈານມາ; ພວກເຂົາເວົ້າຕໍ່ກັນວ່າ,"ເຮົາຈະເຮັດຢ່າງໃດດີ
ກັບຫີບພັນທະສັນຍາຂອງພຣະຢາເວດີ? ຈົ່ງບອກພວກເຮົາວ່າ ພວກເຮົາຈະສົ່ງຫີບກັບໄປບ່ອນເກົ່າໄດ້ຢ່າງໃດ."

[3]ບັນດາປະໂລຫິດ ແລະ ພວກໂຫຣາຈານໄດ້ຕອບວ່າ, "ຖ້າພວກທ່ານສົ່ງຫີບພັນທະສັນຍາຂອງພຣະເຈົ້າແຫ່ງອິສະຣາເອນໄປ,
ກໍຢ່າສົ່ງໄປໂດຍບໍ່ມີຂອງຂວັນ; ທັງຫມົດນີ້ຫມາຍຄວາມວ່າຕ້ອງໄປພ້ອມເຄື່ອງບູຊາລົບລ້າງຄວາມຜິດຖວາຍແດ່ພຣະອົງ.
ແລ້ວພວກທ່ານຈະຖືກປິ່ນປົວໃຫ້ຫາຍດີ, ແລະພວກເຈົ້າຈະຮູ້ວ່າ
ເຫດໃດພຣະຫັດຂອງພຣະອົງຈຶ່ງບໍ່ຫັນໄປຈາກພວກທ່ານຈົນຮອດດຽວນີ້."[4]ແລ້ວພວກເຂົາໄດ້ກ່າວວ່າ,
"ມັນຄວນຈະເປັນອັນໃດທີ່ພວກເຮົາຈະຖວາຍເປັນເຄື່ອງບູຊາລົບລ້າງຄວາມຜິດ ທີ່ພວກເຮົາຕ້ອງໃຫ້ກັບພຣະອົງ?" ພວກເຂົາໄດ້ຕອບວ່າ,
"ຫມາກຝີທອງຄຳຫ້າຫນ່ວຍ ແລະ ຫນູທອງຄຳຫ້າໂຕຕາມຈຳນວນເຈົ້ານາຍຂອງຄົນຟີລິສະຕິນ. ເພາະພວກເຈົ້າ
ແລະພວກເຈົ້ານາຍລ້ວນຖືກພັຍພິບັດເຊັ່ນດຽວກັນ.
[5]ພວກທ່ານຕ້ອງເຮັດແບບຈຳລອງຮູບຝີຂອງພວກທ່ານ, ແລະແບບຈຳລອງຮູບຫນູຂອງພວກເຈົ້າຊຶ່ງທຳລາຍແຜ່ນດິນ,
ແລະພວກເຈົ້າຈົ່ງຖວາຍພຣະສະຫງ່າຣາສີແດ່ພຣະເຈົ້າແຫ່ງອິສະຣາເອນ. ບາງທີ ພຣະອົງຈະຍົກພຣະອົງຂອງພຣະອົງຈາກພວກເຈົ້າ,
ຈາກບັນດາພະເຈົ້າຂອງພວກເຈົ້າ, ແລະຈາກແຜ່ນດິນຂອງພວກເຈົ້າ.[6]ເປັນຫຍັງພວກເຈົ້າເຮັດໃຫ້ໃຈພວກເຈົ້າແຂງກະດ້າງໄປ,
ຢ່າງເຊັ່ນຄົນເອຢິບ ແລະຟາໂຣໄດ້ໃຫ້ໃຈຂອງພວກເຂົາແຂງກະດ້າງ? ຢ່າງນັ້ນແຫລະ ພຣະເຈົ້າແຫ່ງອິສະຣາເອນຈຶ່ງໄດ້ລົງໂທດພວກເຂົາຢ່າງ;
ຄົນເອຢິບກໍຕ້ອງປ່ອຍປະຊາຊົນໄປ, ແລ້ວພວກເຂົາກໍຈາກໄປບໍ່ແມ່ນບໍ?
[7]ບັດນີ້ແລ້ວ, ຈົ່ງໄປຈັດຫາກວຽນໃຫມ່ຄັນຫນຶ່ງ ມາເຂົ້າທຽມແອກກັບງົວແມ່ລູກອ່ອນສອງຕົວ ຊຶ່ງຍັງບໍ່ເຄີຍເຂົ້າທຽມແອກມາກ່ອນ.
ຈົ່ງຜູກແມ່ງົວຄູ່ນີ້ກັບກວຽນ, ແຕ່ໃຫ້ນຳລູກໆມັນຂອງກັບໄປເຮືອນ, ໃຫ້ພົ້ນຈາກແມ່ງົວຄູ່ນີ້.
[8]ແລ້ວຈົ່ງນຳຫີບແຫ່ງພັນທະສັນຂອງພຣະຢາເວມາວາງໄວ້ເທິງກວຽນ. ໃຫ້ວາງເຄື່ອງທອງຄຳ
ຊຶ່ງພວກເຈົ້າຈະສົ່ງໄປຖວາຍພຣະອົງເປັນເຄື່ອງບູຊາລົບຄວາມຜິດໄວ້ໃນກ່ອງຂ້າງຫີບນັ້ນ. ແລ້ວກໍສົ່ງມັນໄປ ແລະປ່ອຍໃຫ້ໄປຕາມທາງຂອງມັນ.
[9]ແລ້ວລໍຖ້າເບິ່ງ; ຖ້າມັນໄປຕາມທາງເຖິງເຂດແດນຂອງມັນເອງ ໄປເຖິງເບັດເຊເມດ, ແລ້ວນັ້ນແຫລະ
ແມ່ນພຣະຢາເວຜູ້ທີ່ໄດ້ຊົງເປັນຜູ້ເຮັດໃຫ້ເກີດຄວາມທຸກຍາກຢ່າງໃຫຍ່ຫລວງເຊັ່ນນີ້. ແຕ່ຖ້າບໍ່ເປັນເຊັ່ນນັ້ນ, ແລ້ວພວກເຮົາຈະໄດ້ຮູ້ວ່າ
ບໍ່ແມ່ນພຣະຫັດຂອງພຣະອົງທີ່ຂ້ຽນຕີພວກເຮົາ; ຖືວ່າ ເປັນສິ່ງທີ່ເກີດຂຶ້ນກັບພວກເຮົາໂດຍບັງເອີນ.
[10]ຄົນເຫລົ່ານັ້ນ ໄດ້ເຮັດຕາມທີ່ພວກເຂົາໄດ້ຮັບຄຳແນະນຳນັ້ນ; ພວກເຂົາໄດ້ນຳເອົາງົວແມ່ລູກອ່ອນສອງໂຕ, ທຽມແອກເຂົ້າກວຽນ,
ແລ້ວຂັງລູກມັນໄວ້ທີ່ເຮືອນ.[11]ພວກເຂົາກໍໄດ້ວາງຫີບແຫ່ງພັນທະສັນຍາຂອງພຣະຢາເວໄວ້ເທິງກວຽນ ພ້ອມກັບກ່ອງຫນູທອງຄຳ ແລະ
ຮູບຝີຂອງພວກເຂົາ.[12]ແມ່ງົວທັງສອງກໍຍ່າງຊື່ກົງໄປຕາມທາງເມືອງເບັດເຊເມດ. ພວກມັນໄດ້ໄປຕາມທາງຫລວງ, ພາງຍ່າງພາງຮ້ອງໄປ
ໂດຍບໍ່ຫັນຂວາ ຫລືຫັນຊ້າຍ. ບັນດາພວກເຈົ້ານາຍຂອງຊາວຟີລິສະຕິນກໍໄດ້ຕິດຕາມ ພວກມັນໄປຈົນເຖິງເຂດແດນເມືອງເບັດເຊເມດ.
[13]ບັດນີ້ ຊາວເມືອງເບັດເຊເມດກຳລັງກ່ຽວເຂົ້າສາລີຢູ່ທີ່ຮ່ອມພູ. ເມື່ອພວກເຂົາເງີຍຫນ້າຂຶ້ນ ແລະ ໄດ້ເຫັນຫີບນັ້ນ, ພວກເຂົາກໍຊື່ນຊົມຍິນດີ.
[14]ກວຽນໄດ້ເຂົ້າມາໃນທົ່ງນາຂອງໂຢຊວຍ ຈາກເມືອງເບັດເຊເມດ ແລະ ໄດ້ຢຸດຢູ່ທີ່ນັ້ນ. ມີຫີນໃຫຍ່ກ້ອນຫນຶ່ງຢູ່ທີ່ນັ້ນ,
ແລະພວກເຂົາຈຶ່ງໄດ້ຜ່າໄມ້ຈາກກວຽນ, ແລະ ໄດ້ຖວາຍແມ່ງົວສອງໂຕນັ້ນເປັນເຄື່ອງເຜົາບູຊາແດ່ພຣະຢາເວ.
[15]ຄົນເລວີໄດ້ນຳຫີບພັນທະສັນຍາຂອງພຣະຢາເວ ແລະ ກ່ອງທີ່ບັນຈຸຮູບຫລໍ່ທອງຄຳຕ່າງໆທີ່ຢູ່ຂ້າງໃນນັ້ນລົງ, ບ່ອນທີ່ຮູບທອງຄຳຕ່າງໆຢູ່ນັ້ນ,
ແລະ ໄດ້ວາງສິ່ງຂອງເຫລົ່ານີ້ໄວ້ເທິງກ້ອນຫີນໃຫຍ່. ຊາວເບັດເຊເມດ ໄດ້ຖວາຍເຄື່ອງເຜົາບູຊາ ແລະ
ຖວາຍສັດບູຊາແດ່ພຣະຢາເວໃນວັນດຽວກັນ.
[16]ເມື່ອເຈົ້ານາຍທັງຫ້າຂອງຄົນຟີລິສະຕິນໄດ້ເຫັນສິ່ງນີ້ແລ້ວ, ພວກເຂົາກໍໄດ້ກັບໄປເມືອງເອກໂລນໃນວັນນັ້ນ.
[17]ຕໍ່ໄປນີ້ ເປັນຮູບຝີຄຳ ຊຶ່ງຊາວຟີລິສະຕິນສົ່ງກັບໄປເປັນ ເຄື່ອງບູຊາລົບລ້າງຄວາມຜິດແດ່ພຣະຢາເວ: ຮູບຫນຶ່ງສຳລັບເມືອງອາສະໂດດ,
ຮູບຫນຶ່ງສຳລັບເມືອງກາຊາ, ຮູບຫນຶ່ງສຳລັບເມືອງອາສະເກໂລນ, ຮູບຫນຶ່ງສຳລັບເມືອງກາດ, ແລະ ອີກຮູບຫນຶ່ງສຳລັບເມືອງເອກໂຣນ.
[18]ຮູບຫນູທອງຄຳກໍເຫມືອນກັນ ຕາມຈຳນວນເມືອງທັງຫມົດຂອງຊາວຟີລິສະຕິນທີ່ເປັນເມືອງຂອງເຈົ້ານາຍທັງຫ້າຄົນ, ທັງເມືອງທີ່ມີປ້ອມປາການ
ແລະ ຫມູ່ບ້ານຕ່າງໆ. ຫີນກ້ອນໃຫຍ່ ຊຶ່ງຢູ່ຂ້າງຫີບພັນທະສັນຍາຂອງພຣະຢາເວ, ຊຶ່ງພວກເຂົາໄດ້ວາງໄວ້ນັ້ນ ກໍຍັງເປັນພະຍານຢູ່ຈົນທຸກວັນນີ້
ທີ່ທົ່ງນາຂອງໂຢຊວຍ ຊາວເບັດເຊເມດ.
[19]ພຣະຢາເວໄດ້ໂຈມຕີຊາວເບັດເຊເມດບາງສ່ວນ ເພາະພວກເຂົາໄດ້ເຫັນຂ້າງໃນຫີບພັນທະສັນຍາຂອງພຣະຢາເວ. ພຣະອົງໄດ້ຂ້າພວກຜູ້ຊາຍ
50.070 ຄົນ. ປະຊາຊົນກໍໂສກເສົ້າ, ເພາະພຣະຢາເວໄດ້ຂ້າປະຊາຊົນເປັນຈຳນວນຫລວງຫລາຍ.[20]ແລ້ວຊາວເມືອງເບັດເຊເມດຈຶ່ງໄດ້ກ່າວວ່າ,
"ໃຜຈະສາມາດຢືນຢູ່ຕໍ່ພຣະພັກພຣະຢາເວໄດ້, ພຣະເຈົ້າຜູ້ບໍຣິສຸດນີ້? ຫີບຈະໄປຫາຜູ້ໃດ ເມື່ອໄປຈາກພວກເຮົາແລ້ວ?"
[21]ພວກເຂົາໄດ້ສົ່ງພວກຜູ້ສົ່ງຂ່າວໄປຍັງຊາວເມືອງກີຣິອາດເຢອາຣີມ,
ເວົ້າວ່າ,"ຊາວຟີລິສະຕິນໄດ້ສົ່ງຫີບພັນທະສັນຍາຂອງພຣະຢາເວຄືນມາແລ້ວ; ຂໍລົງມາແລະນຳຫີບກັບໄປຢູ່ກັບພວກເຈົ້າເຖີ້ນ"

7 [1]ຊາວເມືອງກີຣີອາດເຢອາຣີມໄດ້ມາ, ນຳຫີບພັນທະສັນຍາຂອງພຣະຢາເວ, ຂຶ້ນໄປເຖິງເຮືອນຂອງອາບີນາດາບ ຊຶ່ງຢູ່ເທິງເນີນພູ.
ພວກເຂົາກໍໄດ້ຕັ້ງໃຫ້ເອເລອາຊາລູກຊາຍຂອງລາວ ເພື່ອໃຫ້ດູແລຫີບພັນທະສັນຍາຂອງພຣະຢາເວ.[2]ນັບແຕ່ວັນທີ່ຫີບນັ້ນໄດ້ຢູ່ທີ່
ກີຣີອາດເຢອາຣີມ, ເວລາໄດ້ຜ່ານໄປຍາວນານເຖິງຊາວປີ. ບັນດາເຊື້ອສາຍອິສະຣາເອນທັງຫມົດກໍໄດ້ຄໍ່າຄວນເຖິງພຣະຢາເວ ແລະ
ໄດ້ສະຖາປະນາທີ່ຈະກັບມາຫາພຣະຢາເວ.

[3]ຊາມູເອນໄດ້ເວົ້າກັບເຊື້ອສາຍອິສະຣາເອນທັງປວງວ່າ, "ຖ້າພວກເຈົ້າຈະກັບມາຫາພຣະຢາເວດ້ວຍສິ້ນສຸດໃຈຂອງພວກເຈົ້າ,
ຈົ່ງຖິ້ມພວກພະເຈົ້າຕ່າງດ້າວ ແລະ ພະອັດໂທເຣັດເສຍຈາກທ່າມກາງພວກເຈົ້າ, ແລະຈົ່ງກັບໃຈຂອງພວກເຈົ້າຕໍ່ພຣະຢາເວ,
ແລະນະມັສະການພຽງພຣະອົງເທົ່ານັ້ນ,
ແລ້ວພຣະອົງຈະຊົງຊ່ວຍພວກເຈົ້າໃຫ້ພົ້ນຈາກມືຂອງຄົນຟີລິສະຕິນ."[4]ແລ້ວປະຊາຊົນແຫ່ງອິສະຣາເອນ ຈຶ່ງໄດ້ຖິ້ມພະບາອານ
ແລະພະອັດໂທເຣັດ, ແລະນະມັສະການພຽງພຣະຢາເວເທົ່ານັ້ນ.
[5]ແລ້ວຊາມູເອນໄດ້ເວົ້າວ່າ, "ຈົ່ງນຳຄົນອິສະຣາເອນທັງປວງໄປທີ່ເມືອງມິດສະປາ, ແລະ
ຂ້ານ້ອຍຈະອະທິຖານຕໍ່ພຣະຢາເວເພື່ອພວກເຈົ້າ."[6]ພວກເຂົາຈຶ່ງໄດ້ປະຊຸມກັນທີ່ເມືອງມິຊະປາ,
ແລະໄດ້ຕັກນ້ຳມາເທອອກຕໍ່ພຣະພັກພຣະຢາເວ. ພວກເຂົາໄດ້ອົດອາຫານໃນວັນນັ້ນ ແລະເວົ້າວ່າ, "ພວກເຮົາໄດ້ເຮັດບາບຕໍ່ພຣະຢາເວ."
ໃນບ່ອນນັ້ນເອງທີ່ຊາມູເອນໄດ້ຕັດສິນຂໍ້ຂັດແຍ່ງຂອງປະຊາຊົນອິສະຣາເອນ ແລະ ໄດ້ນຳປະຊາຊົນ.
[7]ບັດນີ້ ເມື່ອຄົນຟີລິສະຕິນໄດ້ຍິນວ່າ ປະຊາຊົນຊາວອິສະຣາເອນໄດ້ມາປະຊຸມກັນທີ່ເມືອງມິຊະປາ,
ພວກເຈົ້ານາຍຂອງຄົນຟີລິສະຕິນກໍໄດ້ຍົກກອງທັບຂຶ້ນມາໂຈມຕີ. ເມື່ອປະຊາຊົນຊາວອິສະຣາເອນໄດ້ຍິນເຊັ່ນນັ້ນ,
ພວກເຂົາກໍຢ້ານກົວຄົນຟີລິສະຕິນ.[8]ແລ້ວປະຊາຊົນຊາວອິສະຣາເອນໄດ້ເວົ້າຕໍ່ຊາມູເອນວ່າ, "ຢ່າຢຸດຮ້ອງທູນພຣະຢາເວພຣະເຈົ້າຂອງພວກເຮົາ
ເພື່ອພວກເຮົາ, ເພື່ອທີ່ພຣະອົງຈະຊ່ວຍພວກເຮົາໃຫ້ພົ້ນຈາກມືຂອງຄົນຟີລິສະຕິນ."
[9]ຊາມູເອນກໍໄດ້ເອົາລູກແກະອ່ອນທີ່ຍັງບໍ່ຢ່ານົມໂຕຫນຶ່ງມາ ແລະ ເປັນເຄື່ອງເຜົາບູຊາຫມົດໂຕຖວາຍແດ່ພຣະຢາເວ.
ແລ້ວຊາມູເອນໄດ້ຮ້ອງທູນຕໍ່ພຣະຢາເວ ເພື່ອອິສະຣາເອນ, ແລະພຣະຢາເວກໍໄດ້ຕອບລາວ.
[10]ໃນຂະນະທີ່ຊາມູເອນກຳລັງຖວາຍເຄື່ອງເຜົາບູຊາຢູ່ນັ້ນ ຄົນຟີລິສະຕິນກໍໄດ້ເຂົ້າມາໃກ້ ເພື່ອບຸກໂຈມຕີອິສະຣາເອນ.
ແຕ່ພຣະຢາເວຊົງໃຫ້ຟ້າຮ້ອງສຽງດັງຕໍ່ສູ້ຄົນຟີລິສະຕິນໃນວັນນັ້ນ ແລະໄດ້ເຮັດໃຫ້ພວກເຂົາສັບສົນ,
ແລະພວກເຂົາກໍວຸ້ນວາຍຕໍ່ຫນ້າຄົນອິສະຣາເອນ.[11]ພວກຜູ້ຊາຍຊາວອິສະຣາເອນກໍໄດ້ອອກຈາກເມືອງມິຊະປາ,
ແລະພວກເຂົາໄດ້ໄລ່ກວາດພວກຟີລິສະຕິນ ແລະໄດ້ຂ້າຟັນພວກເຂົາໄປຈົນເຖິງໃຕ້ຂອງເມືອງເບັດຄາ.
[12]ແລ້ວຊາມູເອນກໍເອົາຫີນກ້ອນຫນຶ່ງ ແລະຕັ້ງໄວ້ລະຫວ່າງເມືອງມິຊະປາ ແລະເມືອງເຊນ. ລາວໄດ້ໃຫ້ຊື່ຫີນນັ້ນວ່າ ເອເບັນເອເຊີ,
ລາວໄດ້ກ່າວວ່າ, "ພຣະຢາເວໄດ້ຊ່ວຍພວກເຮົາມາຈົນເຖິງບັດນີ້."
[13]ດັ່ງນັ້ນ ຄົນຟີລິສະຕິນຈຶ່ງພ່າຍແພ້ ແລະພວກເຂົາບໍ່ໄດ້ເຂົ້າມາໃນເຂດແດນຂອງອິສະຣາເອນອີກເລີຍ.
ພຣະຫັດຂອງພຣະຢາເວໄດ້ຕໍ່ສູ້ຄົນຟີລິສະຕິນຕະຫລອດຊີວິດຂອງຊາມູເອນ.[14]ບັນດາເມືອງທີ່ຄົນຟີລິສະຕິນໄດ້ຍຶດໄປຈາກອິສະຣາເອນນັ້ນ
ກໍໄດ້ຄືນມາເປັນຂອງອິສະຣາເອນອີກ, ຕັ້ງແຕ່ເມືອງເອກໂຣນເຖິງເມືອງກາດ;
ອິສະຣາເອນກໍໄດ້ຍຶດເຂດຊາຍແດນຄືນມາຈາກມືຂອງຄົນຟີລິສະຕິນ. ແລ້ວກໍມີສັນຕິພາບລະຫວ່າງອິສະຣາເອນແລະຄົນອຳໂມນດ້ວຍ.
[15]ຊາມູເອນໄດ້ຕັດສິນປະຊາຊົນອິສະຣາເອນຕະຫລອດຊີວິດຂອງລາວ.[16]ທຸກປີ ລາວກໍໄດ້ວຽນໄປເມືອງເບັດເອນ, ໄປເມືອງກິນການ,
ແລະເມືອງມິຊະປາ. ລາວໄດ້ຕັດສິນຄະດີສຳລັບອິສະຣາເອນໃນບັນດາເມືອງເຫລົ່ານັ້ນ.[17]ແລ້ວລາວໄດ້ກັບມາທີ່ເມືອງຣາມາ,
ເພາະວ່າເຮືອນຂອງລາວຢູ່ທີ່ນັ້ນ; ແລະທີ່ນັ້ນລາວໄດ້ຕັດສິນຄະດີສຳລັບອິສະຣາເອນດ້ວຍ.
ລາວໄດ້ສ້າງແທ່ນບູຊາຖວາຍແດ່ພຣະຢາເວທີ່ນັ້ນດ້ວຍ.

8 [1]ເມື່ອຊາມູເອນເຖົ້າແກ່ແລ້ວ, ລາວໄດ້ຕັ້ງພວກລູກຊາຍຂອງລາວໃຫ້ເປັນຜູ້ປົກຄອງເຫນືອອິດສະຣາເອນ.[2]ຊື່ຂອງລຸກຊາຍຫົວປີຂອງລາວຄື
ໂຢເອນ, ແລະ ຊື່ຂອງລູກຊາຍຄົນທີສອງຄືອາບີຢາ. ພວກເຂົາໄດ້ເປັນຜູ້ຕັດສິນໃນເມືອງເບເຍເອເຊບາ.
[3]ພວກລູກຊາຍຂອງລາວບໍ່ໄດ້ດຳເນີນຊີວິດຕາມຢ່າງຂອງລາວ, ພວກເຂົາໄດ້ຊອກຫາລາຍໄດ້ທີ່ບໍ່ສັດຊື່. ພວກເຂົາໄດ້ຮັບສິນບົນ ແລະ
ໄດ້ບິດເບືອນຄວາມຍຸຕິທັມ.

[4]ພວກເຖົ້າແກ່ທັງຫມົດຂອງອິສະຣາເອນໄດ້ມາຮ່ວມກັນ ແລະ ໄດ້ມາຫາຊາມູເອນຢູ່ເມືອງຣາມາ.[5]ພວກເຂົາໄດ້ເວົ້າກັບລາວວ່າ, "ເບິ່ງແມ໋,
ທ່ານກໍເຖົ້າແກ່ຫລາຍແລ້ວ, ແລະພວກລູກຊາຍຂອງທ່ານບໍ່ໄດ້ດຳເນີນຊີວິດຕາມຢ່າງຂອງທ່ານ. ບັດນີ້
ຂໍທ່ານໄດ້ຕັ້ງກະສັດໃຫ້ເປັນຜູ້ປົກຄອງພວກເຮົາເຫມືອນປະຊາຊາດທັງປວງເຖີ້ນ."
[6]ແຕ່ມັນເຮັດໃຫ້ຊາມູເອນບໍ່ພໍໃຈ ເມື່ອພວກເຂົາໄດ້ເວົ້າວ່າ, "ຂໍຕັ້ງກະສັດໃຫ້ປົກຄອງພວກເຮົາ." ດັ່ງນັ້ນ ຊາມູເອນຈຶ່ງໄດ້ອະທິຖານຕໍ່ພຣະຢາເວ.
[7]ພຣະຢາເວໄດ້ຕອບຊາມູເອນວ່າ,"ຈົ່ງຟັງສຽງຂອງປະຊາຊົນໃນທຸກເລື່ອງທີ່ພວກເຂົາເວົ້າກັບເຈົ້າ; ເພາະວ່າ ພວກເຂົາບໍ່ໄດ້ປະຕິເສດເຈົ້າ,
ແຕ່ພວກເຂົາໄດ້ປະຕິເສດເຮົາ ຈາກການເປັນກະສັດເຫນືອພວກເຂົາ.
[8]ທີ່ພວກເຂົາກຳລັງກະທຳຂະນະນີ້ ກໍເຫມືອນກັບທີ່ພວກເຂົາໄດ້ເຄີຍເຮັດນັບຕັ້ງແຕ່ເຮົາໄດ້ນຳພວກເຂົາອອກມາຈາກເອຢິບ,
ຄືພວກເຂົາໄດ້ປະຖິ້ມເຮົາ, ແລະຮັບໃຊ້ບັນດາພຣະອື່ນ, ແລະດັ່ງນັ້ນພວກເຂົາກຳລັງເຮັດກັບເຈົ້າດ້ວຍເຊັ່ນກັນ.[9]ບັດນີ້ ຈົ່ງຟັງສຽງຂອງພວກເຂົາ;
ແຕ່ຕັກເຕືອນພວກເຂົາຢ່າງຈິງຈັງ ແລະ ສະແດງໃຫ້ພວກເຂົາຮູ້ເຖິງວິທີທາງທີ່ກະສັດຈະປົກຄອງພວກເຂົາ."
[10]ດັ່ງນັ້ນຊາມູເອນຈຶ່ງໄດ້ບອກຖ້ອຍຄຳທັງຫລາຍຂອງພຣະຢາເວໃຫ້ແກ່ປະຊາຊົນທີ່ຂໍໃຫ້ມີກະສັດ.[11]ລາວໄດ້ເວົ້າວ່າ, "ນີ້ເປັນສິ່ງທີ່ກະສັດ
ຜູ້ທີ່ຈະຄອບຄອງເຫນືອພວກເຈົ້າຈະຊິ່ງກະທຳ. ພະອົງຈະເກນລູກຊາຍທັງຫລາຍຂອງພວກເຈົ້າ ແລະ ກຳນົດໃຫ້ພວກເຂົາປະຈຳການລົດຮົບ
ແລະ ໃຫ້ເປັນພົນມ້າຂອງພະອົງ, ແລະໃຫ້ຂັບຣົດມ້າຮົບທັງຫລາຍຂອງພະອົງ.
[12]ພະອົງຈະແຕ່ງຕັ້ງພະອົງເອງໃຫ້ເປັນຜູ້ບັນຊາການທະຫານພັນຄົນ, ແລະ ຜູ້ບັບຊາການທະຫານຫ້າສິບຄົນ.
ພະອົງຈະໃຫ້ບາງຄົນໄຖດິນຂອງພະອົງ, ບາງຄົນກ່ຽວເຂົ້າຂອງພະອົງ, ແລະບາງຄົນເຮັດອາວຸດທັງຫລາຍ
ແລະເຄື່ອງໃຊ້ຂອງຣົດມ້າຮົບຂອງພະອົງ.
[13]ພະອົງຈະນຳລູກສາວທັງຫລາຍຂອງພວກເຈົ້າໄປເປັນຜູ້ປຸງເຄື່ອງຫອມ, ເຮັດອາຫານ ແລະ ເປັນຜູ້ອົບເຂົ້າຈີ່ທັງຫລາຍ.
[14]ພະອົງຈະເອົານາສ່ວນທີ່ດີທີ່ສຸດຂອງພວກເຈົ້າ, ແລະສວນອະງຸ່ນຂອງພວກເຈົ້າ, ແລະ ສວນຫມາກກອກເທດຂອງພວກເຈົ້າ,
ແລະມອບໃຫ້ແກ່ພວກຂ້າຣາຊະການທັງຫລາຍຂອງພະອົງ.[15]ພະອົງຈະເອົາຫນຶ່ງສ່ວນສິບຂອງຜົນລະປູກ
ແລະສວນອະງຸ່ນທັງຫລາຍຂອງພວກເຈົ້າໄປໃຫ້ແກ່ ພວກຂ້າຣາຊະການ ແລະ ຂ້າຣາຊະບໍຣິວານຂອງພະອົງ.
[16]ພະອົງຈະເອົາພວກຂ້າຣາຊະການຊາຍ ແລະ ຍິງເປັນຂອງພະອົງ ແລະສ່ວນທີ່ດີທີ່ສຸດຂອງພວກຄົນຫນຸ່ມ
ແລະລວາຫລາຍຕົວຂອງພວກເຈົ້າໄປ; ພະອົງຈະໃຫ້ພວກເຂົາເຮັດວຽກງານທັງຫມົດໃຫ້ພະອົງ.
[17]ພະອົງຈະຫັກຫນຶ່ງສ່ວນສິບຂອງຝູງສັດຂອງພວກເຈົ້າ, ແລະພວກເຈົ້າຈະເປັນທາດຂອງພະອົງ.[18]ແລ້ວໃນວັນນັ້ນພວກເຈົ້າຈະຮ້ອງທຸກ
ເພາະກະສັດຂອງພວກເຈົ້າ ຜູ້ຊຶ່ງພວກເຈົ້າໄດ້ເລືອກເອົາສຳລັບພວກເຈົ້າ; ແຕ່ພຣະຢາເວຈະບໍ່ຕອບພວກເຈົ້າໃນວັນນັ້ນ."
[19]ແຕ່ປະຊາຊົນໄດ້ປະຕິເສດທີ່ຈະຟັງຊາມູເອນ; ພວກເຂົາກ່າວວ່າ,"ບໍ່!
ຈະຕ້ອງມີກະສັດປົກຄອງເຫນືອພວກເຮົາ[20]ເພື່ອທີ່ພວກເຮົາຈະເປັນເຫມືອນເຫລົ່າປະຊາຊາດອື່ນທັງຫມົດ,
ແລະເພື່ອທີ່ກະສັດຂອງເຮົາຈະຕັດສິນພວກເຮົາ ແລະ ນຳຫນ້າພວກເຮົາໄປແລະຕໍ່ສູ້ໃນສົງຄາມຂອງພວກເຮົາ."
[21]ເມື່ອຊາມູເອນໄດ້ຍິນຖ້ອຍຄຳທັງປວງຂອງປະຊາຊົນ ລາວກໍນຳຖ້ອຍຄຳເຫລົ່ານີ້ກັບໄປທູນພຣະຢາເວໃຫ້ຮູ້ອີກຄັ້ງຫນຶ່ງ.
[22]ພຣະຢາເວກ່າວກັບຊາມູເອນວ່າ, "ຈົ່ງຟັງສຽງຂອງພວກເຂົາ ແລະຫາເຫດໃຫ້ບາງຄົນໄດ້ເປັນກະສັດສຳລັບພວກເຂົາ."
ດັ່ງນັ້ນຊາມູເອນຈຶ່ງໄດ້ກ່າວແກ່ຄົນອິສະຣາເອນວ່າ, "ໃຫ້ທຸກຄົນກັບໄປຍັງເມືອງຂອງຕົນ."


generated on Tue Jun 17 19:01:42 2025

# 9

[1]ມີຜູ້ຊາຍຈາກເຜົ່າເບັນຢາມິນ, ຊາຍຄົນນີ້ເປັນທີ່ນັບຫນ້າຖື. ລາວມີຊື່ວ່າ ກີເຊ ລາວເປັນລູກຊາຍຂອງອາບີເອນ ລູກຊາຍຂອງເຊໂຣເຣ
ລູກຂອງເບໂກຣັດ, ຊຶ່ງເປັນສ່ວນຫນຶ່ງຂອງຕະກຸນອາຟີຢາ, ລູກຊາຍຂອງຄົນເຜົ່າເບັນຢາມິນ.[2]ລາວມີລູກຊາຍຄົນຫນຶ່ງຊື່ໂຊນ,
ເປັນຊາຍຫນຸ່ມຮູບຮ່າງດີ. ບໍ່ມີຜູ້ຊາຍຄົນໃດໃນທ່າມກາງປະຊາຊົນອິສະຣາເອນທີ່ຈະສະຫງ່າກວ່າລາວ. ລາວສູງກວ່າຄົນອື່ນໆໃນປະຊາຊົນ
ຈາກບ່າໄຫລ່ຂອງພວກເຂົາຂຶ້ນໄປ ລາວສູງກວ່າຄົນອື່ນໆທັງຫມົດ.

[3]ບັດນີ້ຝູງລວາຂອງກີເຊ, ຜູ້ເປັນພໍ່ຂອງໂຊນ, ຫາຍໄປ. ດັ່ງນັ້ນກີເຊ ຈຶ່ງໄດ້ເວົ້າກັບໂຊນລູກຊາຍຂອງຕົນວ່າ, "ຈົ່ງເອົາຄົນໃຊ້ຄົນຫນຶ່ງໄປກັບເຈົ້າ;
ຈົ່ງລຸກຂຶ້ນແລະໄປຕາມຫາຝູງລວາ."[4]ດັ່ງນັ້ນ ໂຊນຈຶ່ງໄດ້ເດີນທາງຜ່ານແດນເຂດເນີນພູເຂົາເອຟາຣາອິມ
ແລະໄດ້ເດີນທາງຜ່ານເຂົ້າດິນແດນຊາລີຊາ, ແຕ່ພວກເຂົາຊອກຫາຝູງລວາບໍ່ພົບ. ແລ້ວພວກເຂົາກໍໄດ້ຜ່ານຂ້ວາມດິນແດນຊາອາລິມ,
ແຕ່ຝູງລາບໍ່ໄດ້ຢູ່ທີ່ນັ້ນ. ແລ້ວລາວໄດ້ຜ່ານເຂົ້າດິນແດນຂອງເບັນຢາມິນ, ແຕ່ພວກເຂົາບໍ່ໄດ້ພົບຝູງລວາເລີຍ.
[5]ເມື່ອພວກເຂົາໄດ້ມາເຖິງດິນແດນຊູ, ໂຊນ ຈຶ່ງໄດ້ເວົ້າກັບຄົນໃຊ້ຂອງລາວທີ່ຢູ່ກັບລາວວ່າ, "ຈົ່ງມາເທາະ, ໃຫ້ເຮົາກັບໄປບ້ານ, ຫລື
ພໍ່ຂອງຂ້ອຍອາດຈະເຊົາກັງວົນເລື່ອງຝູງລວາ ແຕ່ເລີ່ມຮ້ອນໃຈກັບເລື່ອງຂອງພວກເຮົາແທນ."[6]ແຕ່ຄົນໃຊ້ໄດ້ກ່າວກັບລາວວ່າ, "ຈົ່ງຟັງເຖີ້ນ,
ມີຄົນຂອງພຣະເຈົ້າຄົນຫນຶ່ງໃນເມືອງນີ້. ລາວເປັນຄົນທີ່ໄດ້ຮັບຄວາມນັບຖືຫລາຍ; ທຸກສິ່ງທີ່ລາວເວົ້າຈະກາຍເປັນຈິງ.
ໃຫ້ພວກເຮົາໄປທີ່ນັ້ນກັນເທາະ; ບາງທີລາວອາດຈະບອກເຮົາເຖິງທາງໃດທີ່ເຮົາຄວນໄປໃນການເດີນທາງຂອງພວກເຮົາ."
[7]ແລ້ວໂຊນໄດ້ເວົ້າກັບຄົນໃຊ້ຂອງລາວວ່າ, "ແຕ່ຖ້າພວກເຮົາໄປ, ພວກເຮົາຈະເອົາຫຍັງໄປໃຫ້ຊາຍຄົນນັ້ນ?
ເພາະວ່າເຂົ້າຈີ່ໃນຖົງຂອງເຮົາກໍຫມົດແລ້ວ, ແລະບໍ່ມີຂອງຂວັນທີ່ຈະນຳໄປໃຫ້ແກ່ຄົນຂອງພຣະເຈົ້າ.
ພວກເຮົາມີອັນໃດແດ່?"[8]ຄົນໃຊ້ໄດ້ຕອບໂຊນ ແລະເວົ້າວ່າ, "ນີ້ແຫລະ, ໃນມືຂ້ານ້ອຍມີເງິນຢູ່ຫນຶ່ງສ່ວນສີ່ເຊເຄັນ
ທີ່ຂ້ານ້ອຍຈະໃຫ້ແກ່ຄົນຂອງພຣະເຈົ້າ, ເພື່ອວ່າລາວຈະໄດ້ບອກພວກເຮົາວ່າທາງໃດທີ່ພວກເຮົາຄວນຈະໄປ."
[9](ອິສະຣາເອນໃນສມັຍກ່ອນ, ເມື່ອຄົນຫນຶ່ງຄົນໃດໄດ້ໄປສະແຫວງຫາຄວາມຮູ້ເຖິງພຣະປະສົງຂອງພຣະເຈົ້າ, ລາວໄດ້ກ່າວວ່າ, "ຈົ່ງມາເຖີ້ນ,
ໃຫ້ເຮົາໄປຫາຜູ້ທຳນວາຍກັນ." ເພາະຜູ້ປະກາດພຣະທັມໃນສມັຍນັ້ນເອີ້ນກັນວ່າຜູ້ທຳນວາຍ.)[10]ແລ້ວໂຊນໄດ້ເວົ້າກັບຄົນໃຊ້ຂອງລາວວ່າ,
"ເວົ້າໄດ້ດີຫລາຍ, ມາເທາະ, ໃຫ້ເຮົາໄປກັນ." ດັ່ງນັ້ນພວກເຂົາຈຶ່ງໄປຍັງເມືອງທີ່ຄົນຂອງພຣະເຈົ້າຢູ່.
[11]ໃນຂະນະທີ່ພວກເຂົາຂຶ້ນພູໄປຍັງເມືອງນັ້ນ, ພວກເຂົາໄດ້ພົບພວກຍິງສາວອອກມາຕັກນ້ຳ; ໂຊນ ແລະ ຄົນໃຊ້ຈຶ່ງໄດ້ຖາມພວກນາງວ່າ,
"ຜູ້ທຳນວາຍຢູ່ທີ່ນີ້ຫລື?"
[12]ພວກນາງໄດ້ຕອບ, ແລະກ່າວວ່າ, "ລາວຢູ່ທີ່ນີ້; ເບິ່ງແມ໋, ລາວຢູ່ດ້ານຫນ້າພວກທ່ານ. ຟ້າວໄປເຖີ້ນ, ເພາະວ່າ ລາວກຳລັງເຂົ້າມາທີ່ເມືອງວັນນີ້,
ເພາະວ່າປະຊາຊົນຈະມີການຖວາຍສັດບູຊາຢູ່ທີ່ສະຖານທີ່ສູງໃນວັນນີ້.[13]ທັນທີທີ່ພວກທ່ານເຂົ້າໄປໃນເມືອງ
ພວກທ່ານຈະພົບລາວກ່ອນທີ່ລາວຈະຂຶ້ນໄປສະຖານທີ່ສັກສັກສິດ ເພື່ອຮັບປະທານອາຫານ.
ປະຊາຊົນຈະບໍ່ຮັບປະທານອາຫານຈົນກວ່າລາວຈະມາ, ເພາະລາວຕ້ອງມາອວຍພອນເຄື່ອງສັດບູຊາ; ຫລັງຈາກນັ້ນ
ພວກຜູ້ທີ່ໄດ້ຖືກເຊີນຈຶ່ງຈະຮັບປະທານ. ບັດນີ້ ຂຶ້ນໄປເຖີດ, ເພາະພວກທ່ານຈະໄດ້ພົບກັບລາວທັນທີ."
[14]ດັ່ງນັ້ນພວກເຂົາທັງສອງຈຶ່ງຂຶ້ນໄປຍັງເມືອງນັ້ນ. ໃນຂະນະທີ່ພວກເຂົາເຂົ້າໄປໃນເມືອງ,
ພວກເຂົາເຫັນຊາມູເອນກຳລັງຍ່າງອອກມາທາງພວກເຂົາ, ເພື່ອຂຶ້ນໄປຍັງສະຖານທີ່ສັກສິດນັ້ນ.
[15]ບັດນີ້ ວັນກ່ອນທີ່ໂຊນຈະມາ, ພຣະຢາເວໄດ້ສຳແດງແກ່ຊາມູເອນແລ້ວວ່າ:[16]"ມື້ອື່ນເວລາປະມານເວລານີ້
ເຮົາຈະສົ່ງຊາຍຄົນຫນຶ່ງຈາກດິນແດນເບັນຢາມິນ, ແລະເຈົ້າຈະເຈີມລາວໃຫ້ເປັນເຈົ້າຊາຍເຫນືອປະຊາຊົນອິສະຣາເອນຂອງເຮົາ.
ລາວຈະຊ່ວຍປະຊາຊົນຂອງເຮົາໃຫ້ພົ້ນຈາກມືຂອງຄົນຟີລິສະຕິນ. ເພາະວ່າ ເຮົາໄດ້ເບິ່ງປະຊາຊົນຂອງເຮົາດ້ວຍຄວາມສົງສານ
ເພາະສຽງຮ້ອງໄຫ້ຂໍຄວາມຊ່ວຍເຫລືອຂອງພວກເຂົາມາເຖິງເຮົາແລ້ວ."
[17]ເມື່ອຊາມູເອນໄດ້ເຫັນໂຊນ, ພຣະຢາເວ ຊົງບອກກັບລາວວ່າ, "ນີ້ເປັນຄົນທີ່ເຮົາໄດ້ບອກເຈົ້າ!
ລາວຄືຄົນທີ່ຈະປົກຄອງເຫນືອປະຊາຊົນຂອງເຮົາ."[18]ແລ້ວໂຊນກໍໄດ້ເຂົ້າມາໃກ້ຊາມູເອນທີ່ປະຕູແລະໄດ້ເວົ້າວ່າ, "ຂໍບອກຂ້ານ້ອຍແດ່ວ່າ
ເຮືອນຂອງຜູ້ທຳນວາຍຢູ່ບ່ອນໃດ?"[19]ຊາມູເອນໄດ້ຕອບໂຊນ ແລະ ເວົ້າວ່າ, "ຂ້າພະເຈົ້າເປັນຜູ້ທຳນວາຍຄົນນັ້ນ.
ຈົ່ງນຳຫນ້າຂ້າພະເຈົ້າຂຶ້ນໄປຍັງສະຖານທີ່ສັກສິດ, ເພາະໃນວັນນີ້ ທ່ານຈະກິນອາຫານກັບຂ້າພະເຈົ້າ. ເຊົ້າມື້ອື່ນຂ້າພະເຈົ້າຈະໃຫ້ທ່ານໄປ,
ແລະ ຂ້າພະເຈົ້າຈະບອກທຸກຢ່າງທີ່ຢູ່ໃນໃຈຂອງທ່ານແກ່ທ່ານ.
[20]ສ່ວນເລື່ອງຝູງລວາຂອງທ່ານທີ່ຫາຍໄປສາມວັນແລ້ວນັ້ນ, ຢ່າວິຕົກກັງວົນກັບພວກມັນເລີຍ, ເພາະມີຄົນພົບພວກມັນແລ້ວ.
ຄວາມປຣາຖນາທັງຫມົດຂອງອິສະຣາເອນນັ້ນຢູ່ກັບໃຜ? ມັນບໍ່ແມ່ນຕົວທ່ານ ແລະເຊື້ອສາຍຂອງພໍ່ທ່ານຫລື?"[21]ໂຊນຕອບ ແລະ ເວົ້າວ່າ,
"ຂ້ານ້ອຍບໍ່ແມ່ນຄົນເຜົ່າເບັນຢາມິນ, ທີ່ເປັນເຜົ່າເລັກນ້ອຍທີ່ສຸດໃນບັນດາເຜົ່າຂອງອິສະຣາເອນຫລື?
ເປັນເຜົ່າເລັກນ້ອຍທີ່ສຸດໃນເຜົ່າຕ່າງໆຂອງອິສະຣາເອນ ແລະ ຕະກຸນຂອງຂ້ານ້ອຍບໍ່ແມ່ນຕະກຸນທີ່ຕ່ຳຕ້ອຍທີ່ສຸດໃນບັນດາ
ຕະກຸນຂອງເຜົ່າເບັນຢາມິນຫລື? ເປັນຫຍັງທ່ານຈຶ່ງບອກຖ້ອຍຄຳເຫລົ່ານີ້ກັບຂ້ານ້ອຍ ດ້ວຍທ່າທາງຢ່າງນີ້?"
[22]ດັ່ງນັ້ນ ຊາມູເອນກໍໄດ້ພາໂຊນກັບຄົນໃຊ້ຂອງລາວ, ນຳພວກເຂົາເຂົ້າໄປໃນຫ້ອງໂຖງ, ແລະໃຫ້ພວກເຂົານັ່ງໃນບ່ອນນັ່ງດ້ານຫນ້າ
ສຳລັບຄົນເຫລົ່ານັ້ນທີ່ໄດ້ຮັບເຊີນມາ, ຊຶ່ງມີປະມານ 30 ຄົນ.
[23]ຊາມູເອນໄດ້ເວົ້າກັບພໍ່ຄົວວ່າ, "ຈົ່ງນຳສ່ວນທີ່ເຮົາມອບໃຫ້ເຈົ້າ ຊຶ່ງເຮົາໄດ້ບອກເຈົ້າວ່າ, 'ໃຫ້ເກັບໄວ້ຕ່າງຫາກ.'" ນັ້ນມາ.[24]ດັ່ງນັ້ນ
ພໍ່ຄົວຈຶ່ງໄດ້ນຳສ່ວນຂາໂຕ້ ແລະ ສິ່ງທີ່ວາງເທິງທີ່ນັ້ນມາ ແລະໄດ້ວາງໄວ້ຕໍ່ຫນ້າໂຊນ. ແລ້ວຊາມູເອນເວົ້າວ່າ, "ຈົ່ງເບິ່ງ
ສ່ວນທີ່ໄດ້ເກັບໄວ້ກໍໄດ້ວາງຢູ່ຕໍ່ຫນ້າທ່ານແລ້ວ. ຈົ່ງກິນມັນເຖີ້ນ, ເພາະວ່າ ມັນຖືກເກັບໄວ້ໃຫ້ແກ່ທ່ານ ຈົນເຖິງເວລາທີ່ກຳຫນົດໄວ້,
ຈາກເວລາທີ່ຂ້າພະເຈົ້າໄດ້ເວົ້າວ່າ, "ຂ້າພະເຈົ້າໄດ້ເຊີນປະຊາຊົນມາແລ້ວ.'" ດັ່ງນັ້ນ ໂຊນຈຶ່ງຮັບປະທານອາການຮ່ວມກັບຊາມູເອນໃນວັນນັ້ນ.
[25]ເມື່ອພວກເຂົາໄດ້ລົງມາຈາກສະຖານທີ່ສັກສິດ ເຂົ້າມາໃນເມືອງ, ຊາມູເອນໄດ້ສົນທະນາກັບໂຊນເທິງດາດຟ້າ.[26]ແລ້ວໃນຕອນເຊົ້າມືດ,
ຊາມູເອນກໍໄດ້ເອີ້ນເອົາໂຊນຈາກເທິງດາດຟ້າ ແລະ ໄດ້ເວົ້າວ່າ, "ຈົ່ງລຸກຂຶ້ນ, ເພື່ອຂ້າພະເຈົ້າຈະສົ່ງທ່ານໄປຕາມທາງຂອງທ່ານ."
ດັ່ງນັ້ນໂຊນກໍໄດ້ລຸກຂຶ້ນ, ແລະທັງສອງກໍໄດ້ອອກໄປທີ່ຖະຫນົນ.


generated on Tue Jun 17 19:01:42 2025

27ໃນຂະນະທີ່ພວກເຂົາກຳລັງຍ່າງກົງໄປທີ່ຊານເມືອງ, ຊາມູເອນໄດ້ເວົ້າກັບໂຊນວ່າ, "ຈົ່ງບອກຄົນໃຊ້ໃຫ້ຍ່າງນຳໜ້າພວກເຮົາໄປກ່ອນ" — ແລະ ລາວໄດ້ຍ່າງໄປແລ້ວ — "ແຕ່ທ່ານຈົ່ງຢູ່ທີ່ນີ້ຈັກໜ້ອຍກ່ອນ, ເພື່ອທີ່ຂ້າພະເຈົ້າຈະໄດ້ປະກາດຖ້ອຍຄຳຂອງພຣະເຈົ້າໃຫ້ທ່ານຮູ້."

 generated on Tue Jun 17 19:01:42 2025

10 [1]ແລ້ວຊາມູເອນກໍໄດ້ຈັບແກ້ວນ້ຳມັນ, ໄດ້ເທລົງເທິງຫົວຂອງໂຊນ, ແລະໄດ້ຈູບລາວ. ລາວກ່າວວ່າ,
"ພຣະຢາເວເຈີມທ່ານໄວ້ໃຫ້ເປັນຜູ້ນຳເຫນືອມໍຣະດົກຂອງພຣະອົງແລ້ວບໍ່ແມ່ນຫລື? [2]ເມື່ອທ່ານໄປຈາກຂ້າພະເຈົ້າວັນນີ້,
ທ່ານຈະພົບຊາຍສອງຄົນໃກ້ທີ່ຝັງສົບຂອງຣາເຊັນໃນເຂດແດນເບັນຢາມິນທີ່ເຊັນຊາ. ພວກເຂົາຈະບອກທ່ານວ່າ,
'ຝູງລວາຊຶ່ງທ່ານຊອກຫານັ້ນໄດ້ພົບແລ້ວ. ບັດນີ້ ບິດາຂອງທ່ານໄດ້ເລີກກັງວົນເລື່ອງຝູງລວາແລ້ວ ແລະຮ້ອນໃຈເລື່ອງຂອງພວກທ່ານ, ກ່າວວ່າ,
"ເຮົາຈະເຮັດຢ່າງໃດເລື່ອງລູກຊາຍຂອງເຮົາດີ?"'

[3]ແລ້ວທ່ານຈະຜ່ານທີ່ນັ້ນໄປ, ແລະທ່ານຈະໄປເຖິງຕົ້ນໂອກແຫ່ງທາໂບ. ຊາຍສາມຄົນຊຶ່ງກຳລັງຂຶ້ນໄປຫາພຣະເຈົ້າທີ່ເບັດເອນຈະພົບທ່ານທີ່ນັ້ນ,
ຄົນຫນຶ່ງແບກລູກແບ້ສາມໂຕ, ອີກຄົນຫນຶ່ງຖືເຂົ້າຈີ່ສາມກ້ອນ, ແລະອີກຄົນຫນຶ່ງຖືຖົງຫນັງເຫລົ້າອະງຸ່ນຖົງຫນຶ່ງ. [4]ພວກເຂົາຈະທັກທາຍທ່ານ
ແລະ ມອບເຂົ້າຈີ່ໃຫ້ທ່ານສອງກ້ອນ, ຊຶ່ງທ່ານຈະຮັບເອົາຈາກມືຂອງພວກເຂົາ.
[5]ຕໍ່ຈາກນັ້ນ, ທ່ານຈະມາເຖິງເນີນພູຂອງພຣະເຈົ້າ, ບ່ອນຊຶ່ງກອງທະຫານຮັກສາການຂອງພວກຟີລິສະຕິນຢູ່. ເມື່ອທ່ານມາເຖິງເມືອງ,
ທ່ານຈະພົບກຸ່ມຜູ້ປະກາດພຣະທັມກຳລັງມາຈາກສະຖານທີ່ສັກສິດພ້ອມດ້ວຍພິນໃຫຍ່, ຣຳມານາດ, ປີ່, ພິນເຂົາຄູ່, ແລະນຳຫນ້າພວກເຂົາໄປ;
ພວກເຂົາຈະປະກາດພຣະທັມຢູ່. [6]ພຣະວິນຍານຂອງພຣະຢາເວຈະສວມທັບທ່ານ, ແລະທ່ານຈະປະກາດພຣະທັມຮ່ວມກັບຄົນເຫລົ່ານັ້ນ,
ແລະທ່ານຈະຖືກປ່ຽນໄປເປັນຄົນລະຄົນ.
[7]ບັດນີ້, ເມື່ອຫມາຍສຳຄັນເຫລົ່ານີ້ເກີດແດ່ທ່ານ, ເຮັດຫຍັງກໍໄດ້ຕາມທີ່ມີໂອກາດ, ເພາະພຣະເຈົ້າຊົງສະຖິດກັບທ່ານ.
[8]ຈົ່ງລົງໄປກ່ອນຫນ້າຂ້າພະເຈົ້າທີ່ກິນການ. ແລ້ວຂ້າພະເຈົ້າຈະລົງໄປມາຫາທ່ານ ເພື່ອຖວາຍເຄື່ອງເຜົາບູຊາ ແລະ ຖວາຍເຄື່ອງສັນຕິບູຊາ.
ຈົ່ງຄອຍຖ້າເຈັດວັນຈົນກວ່າຂ້າພະເຈົ້າມາຫາທ່ານ ແລະ ບອກທ່ານໃຫ້ຮູ້ວ່າທ່ານຈະຕ້ອງເຮັດຢ່າງໃດ."
[9]ເມື່ອໂຊນໄດ້ຈາກຊາມູເອນໄປ, ພຣະເຈົ້າໄດ້ປ່ຽນຈິດໃຈຂອງໂຊນໃຫ້ເປັນອີກແບບຫນຶ່ງ.
ແລ້ວຫມາຍສຳຄັນເຫລົ່ານີ້ທັງຫມົດກໍໄດ້ເກີດຂຶ້ນໃນວັນນັ້ນ. [10]ເມື່ອພວກເຂົາໄດ້ມາທີ່ເນີນພູ, ກຸ່ມຂອງຜູ້ປະກາດພຣະທັມໄດ້ມາພົບກັບລາວ,
ແລະພຣະວິນຍານຂອງພຣະເຈົ້າໄດ້ສວມທັບລາວ ດັ່ງນັ້ນລາວກໍປະກາດພຣະທັມຢູ່ໃນຫມູ່ພວກເຂົາ.
[11]ເມື່ອທຸກຄົນທີ່ຮູ້ຈັກລາວ ກ່ອນມາເຫັນລາວປະກາດພຣະທັມຢູ່ກັບພວກຜູ້ປະກາດພຣະທັມນັ້ນ, ປະຊາຊົນເຫລົ່ານັ້ນກໍໄດ້ເວົ້າກັນວ່າ,
"ເກີດຫຍັງຂຶ້ນກັບລູກຊາຍຂອງກີເຊ?
ຕອນນີ້ໂຊນໄດ້ຢູ່ໃນຈຳພວກຜູ້ປະກາດພຣະທັມດ້ວຍຫລື?" [12]ຜູ້ຊາຍຄົນຫນຶ່ງທີ່ມາຈາກທີ່ນັ້ນເຫມືອນກັນໄດ້ຕອບວ່າ,
"ແລ້ວບິດາຂອງພວກເຂົາເປັນໃຜ?" ດ້ວຍເຫດນີ້, ກໍກາຍເປັນຄຳກ່າວວ່າ,
"ໂຊນເປັນຜູ້ປະກາດພຣະທັມອີກຄົນຫນຶ່ງຫລື?" [13]ເມື່ອລາວໄດ້ປະກາດພຣະທັມສຳເລັດແລ້ວ, ລາວກໍໄດ້ມາຍັງສະຖານທີ່ສັກສິດ.
[14]ແລ້ວລຸງຂອງໂຊນຈຶ່ງໄດ້ຖາມລາວ ແລະ ຄົນໃຊ້ຂອງລາວວ່າ, "ພວກເຈົ້າໄປໃສມາ?" ລາວຕອບວ່າ,"ໄປຊອກຫາຝູງລວາ.
ເມື່ອພວກເຮົາເຫັນວ່າ ພວກເຮົາບໍ່ສາມາດຊອກຫາຝູງລວານັ້ນແລ້ວ, ພວກເຮົາຈຶ່ງໄດ້ໄປຫາຊາມູເອນ." [15]ລຸງຂອງໂຊນເວົ້າວ່າ, "ຂໍບອກຂ້ອຍວ່າ
ຊາມູເອນໄດ້ບອກຫຍັງແກ່ເຈົ້າແດ່." [16]ໂຊນໄດ້ຕອບລຸງຂອງລາວວ່າ, "ລາວໄດ້ບອກພວກເຮົາຢ່າງຈະແຈ້ງວ່າ ພົບຝູງລວາແລ້ວ."
ແຕ່ລາວບໍ່ໄດ້ບອກລຸງເລື່ອງລາວທີ່ກ່ຽວກັບ ຣາຊະອານາຈັກ, ຊຶ່ງຊາມູເອນໄດ້ເວົ້າ.
[17]ບັດນີ້ຊາມູເອນໄດ້ເອີ້ນປະຊາຊົນມາປະຊຸມກັນ ຕໍ່ຫນ້າພຣະຢາເວທີ່ມີຊະປາ. [18]ລາວໄດ້ກ່າວແກ່ປະຊາຊົນອິສະຣາເອນວ່າ,
"ນີ້ຄືສິ່ງທີ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນໄດ້ກ່າວວ່າ, 'ເຮົາໄດ້ນຳອິສະຣາເອນອອກຈາກເອຢິບ,
ແລະເຮົາໄດ້ຊ່ວຍກູ້ພວກເຈົ້າຈາກມືຂອງຊາວເອຢິບ,
ແລະຈາກມືຂອງອານາຈັກທັງຫລາຍທີ່ໄດ້ຂົ່ມເຫງພວກເຈົ້າ.' [19]ແຕ່ວັນນີ້ພວກເຈົ້າຈະປະຖິ້ມພຣະເຈົ້າຂອງພວກເຈົ້າ,
ຜູ້ຊຶ່ງຊ່ວຍພວກເຈົ້າໃຫ້ພົ້ນຈາກຄວາມຍາກລຳບາກ ແລະຄວາມທຸກຮ້ອນ; ແລະພວກເຈົ້າກ່າວຕໍ່ພຣະອົງວ່າ, 'ຂໍຕັ້ງກະສັດໄວ້ເຫນືອເຮົາ.' ບັດນີ້
ຈົ່ງເຂົ້າມາຕໍ່ຫນ້າພຣະຢາເວຕາມເຜົ່າຂອງພວກເຈົ້າ ແລະຕາມຕະກຸນຂອງພວກເຈົ້າ."
[20]ດັ່ງນັ້ນ ຊາມູເອນກໍໄດ້ນຳເຜົ່າອິດສະຣາເອນທຸກເຜົ່າເຂົ້າມາໃກ້, ແລະເຜົ່າເບັນຢາມິນໄດ້ຖືກເລືອກ.
[21]ແລ້ວລາວກໍນຳເຜົ່າເບັນຢາມິນເຂົ້າມາໃກ້ຕາມຕະກຸນຂອງພວກເຂົາ; ແລະຕະກຸນມາຕາຣີໄດ້ຮັບເລືອກ;
ແລະໂຊນລູກຊາຍຂອງກີເຊກໍໄດ້ຖືກເລືອກ. ແຕ່ເມື່ອພວກເຂົາໄດ້ອອກໄປຊອກຫາໂຊນກໍບໍ່ພົບ.
[22]ແລ້ວປະຊາຊົນກໍຕ້ອງການທີ່ຈະທູນຖາມພຣະເຈົ້າອີກຫລາຍຄຳຖາມຕໍ່ໄປວ່າ, "ມີຜູ້ຊາຍອີກຄົນຫນຶ່ງມາທີ່ນີ້ຫລືຍັງ?" ພຣະຢາເວໄດ້ກ່າວວ່າ,
"ລາວໄດ້ລີ້ຢູ່ທີ່ກອງຂີ້ເຫຍື້ອ." [23]ແລ້ວພວກເຂົາທັງຫລາຍໄດ້ແລ່ນໄປ ແລະພາໂຊນມາຈາກທີ່ນັ້ນ. ເມື່ອລາວໄດ້ຢືນຢູ່ທ່າມກາງປະຊາຊົນ,
ລາວກໍສູງກວ່າປະຊາຊົນທຸກຄົນຈາກບ່າໄຫລ່ຂຶ້ນໄປ.
[24]ແລ້ວຊາມູເອນຈຶ່ງໄດ້ກ່າວແກ່ປະຊາຊົນວ່າ, "ພວກເຈົ້າເຫັນຜູ້ທີ່ພຣະຢາເວຊົງເລືອກໄວ້ແລ້ວຫລືບໍ່?
ບໍ່ມີຄົນໃດເຫມືອນກັບລາວໃນທ່າມກາງປະຊາຊົນທັງຫມົດ!" ປະຊາຊົນທັງປວງຈຶ່ງໄດ້ຮ້ອງສຽງດັ່ງວ່າ,"ຂໍພະມະຫາກະສັດຈົ່ງຊົງພະຈະເຣີນ!"
[25]ແລ້ວຊາມູເອນຈຶ່ງໄດ້ບອກກັບປະຊາຊົນໃຫ້ຮູ້ເຖິງທຳນຽມປະຕິບັດ ແລະ ກົດຕ່າງໆຂອງຕຳແຫນ່ງກະສັດ, ໄດ້ບັນທຶກໄວ້ໃນຫນັງສື,
ແລະໄດ້ວາງໄວ້ຕໍ່ພຣະພັກພຣະຢາເວ. ແລ້ວຊາມູເອນກໍໄດ້ໃຫ້ປະຊາຊົນກັບໄປບ້ານເຮືອນຂອງຕົນເອງ.
[26]ໂຊນກໍໄດ້ກັບເມືອເຮືອນຂອງລາວທີ່ກີເບອາດ້ວຍ, ແລະມີເຫລົ່ານັກຮົບ, ຊຶ່ງພຣະເຈົ້າໄດ້ບັນດານໃຫ້ຈິດໃຈໄປກັບລາວດ້ວຍ.
[27]ແຕ່ມີຄົນອັນຕະພານບາງຄົນກ່າວວ່າ, "ຊາຍຄົນນີ້ຈະຊ່ວຍເຮົາໄດ້ຢ່າງໃດ?" ພວກປະຊາຊົນເຫລົ່ານີ້ໄດ້ຫມິ່ນປະຫມາດໂຊນ
ແລະບໍ່ໄດ້ນຳຂອງຂວັນອັນໃດມາໃຫ້ລາວ. ແຕ່ໂຊນກໍມິດງຽບໄວ້ຢູ່.

 generated on Tue Jun 17 19:01:42 2025

# 11

[1]ແລ້ວນາຮາດຄົນອຳໂມນກໍໄດ້ໄປ ແລະ ໄດ້ຕັ້ງລ້ອມເມືອງຢາເບັດ ກີເລອາດ. ຊາວເມືອງຢາເບັດທັງຫມົດຈຶ່ງໄດ້ເວົ້າກັບນາຮາດວ່າ,
"ຈົ່ງເຮັດພັນທະສັນຍາກັບພວກເຮົາ, ແລະພວກເຮົາຈະຍອມຮັບໃຊ້ພວກທ່ານ."[2]ແຕ່ນາຮາດຄົນອຳໂມນໄດ້ຕອບພວກເຂົາວ່າ,
"ຕາມເງື່ອນໄຂນີ້ ຂ້ອຍຈະເຮັດສົນທິສັນຍາກັບພວກທ່ານ, ຄືວ່າເຮົາຈະຄວັກຕາເບື້ອງຂວາຂອງພວກເຈົ້າທຸກຄົນ, ແລະ
ດ້ວຍວິທີນີ້ຈະເປັນທີ່ອັບປະຍົດແກ່ອິສະຣາເອນທັງປວງ."

[3]ສ່ວນພວກເຖົ້າແກ່ແຫ່ງເມືອງຢາເບັດໄດ້ຕອບພວກເຂົາວ່າ, "ຂໍຜ່ອນຜັນໃຫ້ພວກເຮົາຈັກເຈັດວັນ,
ເພື່ອພວກເຮົາຈະໄດ້ສົ່ງພວກຜູ້ສົ່ງຂ່າວໄປໃຫ້ທົ່ວເຂດແດນອິສະຣາເອນ. ແລ້ວ, ຖ້າບໍ່ມີຄົນໃດຊ່ວຍກູ້ພວກເຮົາໄດ້,
ພວກເຮົາຈະຍອມມອບຕົວກັບພວກທ່ານ."
[4]ຜູ້ສົ່ງຂ່າວໄດ້ມາເຖິງກີເບອາ, ບ່ອນທີ່ໂຊນອາສັຍຢູ່, ແລະໄດ້ບອກປະຊາຊົນວ່າມີຫຍັງເກີດຂຶ້ນ. ປະຊາຊົນທັງປວງກໍຮ້ອງໄຫ້ດ້ວຍສຽງດັງ.[5]ບັດນີ້
ໂຊນກຳລັງຕ້ອນຝູງງົວກັບມາຈາກທົ່ງຫຍ້າ. ໂຊນໄດ້ກ່າວວ່າ, "ມີຫຍັງເກີດຂຶ້ນກັບປະຊາຊົນທີ່ພວກເຂົາກຳລັງຮ້ອງໄຫ້ນັ້ນ?"
ພວກເຂົາຈຶ່ງເລົ່າໃຫ້ໂຊນຮູ້ເຖິງເລື່ອງທີ່ຄົນຢາເບັດໄດ້ເວົ້າໄວ້.
[6]ເມື່ອໂຊນໄດ້ຍິນສິ່ງທີ່ພວກເຂົາໄດ້ເວົ້າ, ພຣະວິນຍານຂອງພຣະເຈົ້າກໍໄດ້ສວມທັບໂຊນ, ແລະລາວກໍໂກດຮ້າຍຢ່າງໃຫຍ່.
[7]ລາວຈຶ່ງເອົາແອກງົວມາອັນຫນຶ່ງຕັດອອກໃຫ້ເປັນທ່ອນໆ, ແລະ ໄດ້ໃຫ້ພວກຜູ້ສົ່ງຂ່າວໄປທົ່ວເຂດແດນທັງປວງຂອງອິສະຣາເອນ.
ລາວໄດ້ເວົ້າວ່າ, "ໃຜທີ່ບໍ່ອອກມາຕິດຕາມໂຊນ ແລະ ຕິດຕາມຊາມູເອນ, ນີ້ຄືສິ່ງທີ່ຈະເກີດຂຶ້ນກັບງົວຂອງລາວ."
ແລ້ວຄວາມຢ້ານກົວພຣະຢາເວກໍໄດ້ແຜ່ມາເຫນືອປະຊາຊົນ, ແລະ ພວກເຂົາກໍໄດ້ອອກມາຮ່ວມເປັນໃຈດຽວກັນ.
[8]ເມື່ອລາວໄດ້ລວມພົນຢູ່ທີ່ເບເຊັກ, ປະຊາຊົນອິສະຣາເອນມີສາມແສນຄົນ, ແລະຜູ້ຊາຍເຜົ່າຢູດາມີສາມສິບພັນຄົນ.
[9]ພວກເຂົາຈຶ່ງໄດ້ເວົ້າກັບພວກຜູ້ສົ່ງຂ່າວທີ່ມານັ້ນວ່າ, "ພວກເຈົ້າຈົ່ງບອກຄົນຢາເບັດ ກີເລອາດວ່າ, 'ມື້ອື່ນ, ໃນເວລາແດດຮ້ອນ,
ພວກທ່ານຈະໄດ້ຮັບການຊ່ວຍເຫລືອ.'"ດັ່ງນັ້ນ ພວກຜູ້ສົ່ງຂ່າວຈຶ່ງໄດ້ກັບໄປ ແລະ ໄດ້ບອກຄົນຢາເບັດ, ແລະພວກເຂົາກໍດີໃຈ.
[10]ແລ້ວຄົນຢາເບັດຈຶ່ງໄດ້ເວົ້າກັບນາຮາດວ່າ,"ມື້ອື່ນ ພວກເຮົາຈະຍອມມອບຕົວກັບພວກທ່ານ, ແລະ
ພວກທ່ານສາມາດເຮັດຢ່າງໃດກັບພວກເຮົາກໍໄດ້ຕາມທີ່ພວກທ່ານເຫັນວ່າດີສຳລັບພວກທ່ານ."
[11]ພໍຮອດຕອນເຊົ້າຂອງວັນຕໍ່ມາ ໂຊນກໍໄດ້ຈັດແບ່ງປະຊາຊົນອອກເປັນສາມກຸ່ມ. ພວກເຂົາໄດ້ຍົກເຂົ້າມາກາງຄ້າຍໃນຕອນເຊົ້າມືດ, ແລະ
ໄດ້ໂຈມຕີ ແລະ ເອົາຊະນະຄົນອຳໂມນໃນເວລາແດດອອກ. ພວກທີ່ລອດຊີວິດກໍໄດ້ກະຈັດກະຈາຍໄປ, ດັ່ງນັ້ນ
ບໍ່ມີສອງຄົນໃດທີ່ຫນີໄປດ້ວຍກັນໄດ້ເລີຍ.
[12]ແລ້ວປະຊາຊົນຈຶ່ງໄດ້ເວົ້າກັບຊາມູເອນວ່າ, "ແມ່ນໃຜເປັນຄົນເວົ້າວ່າ, 'ໂຊນຈະປົກຄອງເຫນືອພວກເຮົາຫລື?' ຈົ່ງນຳຄົນເຫລົ່ານັ້ນອອກມາ,
ເພື່ອພວກເຮົາຈະໄດ້ຂ້າພວກເຂົາເສຍ."[13]ແຕ່ໂຊນໄດ້ເວົ້າວ່າ, "ໃນວັນນີ້ ຢ່າໃຫ້ຜູ້ໃດຖືກປະຫານຊີວິດເລີຍ, ເພາະວ່າ
ວັນນີ້ເປັນວັນທີ່ພຣະຢາເວໄດ້ຊ່ວຍອິສະຣາເອນ."
[14]ແລ້ວຊາມູເອນຈຶ່ງໄດ້ເວົ້າກັບປະຊາຊົນວ່າ, "ມາເຖີດ, ໃຫ້ພວກເຮົາໄປຍັງກິນການ ແລະ ຮື້ຟື້ນເລື່ອງຣາຊະວົງທີ່ນັ້ນ."[15]ດັ່ງນັ້ນ
ປະຊາຊົນທັງປວງຈຶ່ງໄດ້ໄປຍັງກິນການ ແລະ ໄດ້ຕັ້ງໂຊນເປັນກະສັດ ຕໍ່ພຣະພັກພຣະຢາເວທີ່ກິນການ. ຢູ່ທີ່ນັ້ນ
ພວກເຂົາໄດ້ຖວາຍສັນຕິພາບບູຊາຕໍ່ພຣະພັກພຣະຢາເວ, ແລະ ໂຊນພ້ອມກັບປະຊາຊົນອິສະຣາເອນທັງປວງກໍປິຕິຍິນດີຢ່າງຍິ່ງໃຫຍ່ຢູ່ທີ່ນັ້ນ.


generated on Tue Jun 17 19:01:42 2025

12 1ຊາມູເອນຈຶ່ງໄດ້ເວົ້າກັບປະຊາຊົນທັງປວງວ່າ, "ຂ້າພະເຈົ້າໄດ້ຟັງທຸກເລື່ອງທີ່ພວກທ່ານໄດ້ບອກຂ້າພະເຈົ້າ,
ແລະຂ້າພະເຈົ້າໄດ້ຕັ້ງກະສັດເຫນືອພວກທ່ານແລ້ວ. 2ບັດນີ້, ນີ້ຄືກະສັດທີ່ດໍາເນີນຢູ່ຕໍ່ຫນ້າພວກທ່ານ;
ແລະຂ້າພະເຈົ້າກໍເຖົ້າຈົນຜົມຫງອກແລ້ວ; ແລະ ພວກລູກຊາຍຂອງຂ້າພະເຈົ້າກໍຢູ່ກັບພວກທ່ານ.
ຂ້າພະເຈົ້າເອງກໍໄດ້ຢູ່ຕໍ່ຫນ້າພວກທ່ານຕັ້ງແຕ່ຫນຸ່ມຈົນເຖິງທຸກວັນນີ້.

3ຂ້າພະເຈົ້າຢູ່ທີ່ນີ້; ຂໍພວກທ່ານຈົ່ງເປັນພະຍານຕໍ່ສູ້ຂ້າພະເຈົ້າຕໍ່ພຣະພັກພຣະຢາເວ ແລະ ຕໍ່ຫນ້າຜູ້ທີ່ພຣະອົງໄດ້ຊົງເຈີມໄວ້.
ງົວຂອງໃຜແດ່ທີ່ຂ້າພະເຈົ້າໄດ້ຍຶດເອົາໄວ້? ລວາຂອງໃຜແດ່ທີ່ຂ້າພະເຈົ້າໄດ້ຍຶດເອົາໄປ? ມີໃຜແດ່ທີ່ຂ້າພະເຈົ້າໄດ້ເຄີຍສໍ້ໂກງ?
ມີໃຜແດ່ທີ່ຂ້າພະເຈົ້າໄດ້ເຄີຍບີບບັງຄັບ? ຂ້າພະເຈົ້າຮັບສິນຈ້າງລາງວັນຈາກມືຂອງໃຜແດ່ທີ່ປິດຕາຂອງຂ້າພະເຈົ້າ?
ຈົ່ງເປັນພະຍານຕໍ່ສູ້ຂ້າພະເຈົ້າສາ, ແລະ ຂ້າພະເຈົ້າຈະຄືນໃຫ້ແກ່ພວກທ່ານ."
4ພວກເຂົາໄດ້ເວົ້າວ່າ, "ທ່ານບໍ່ເຄີຍໄດ້ຫລອກລວງພວກເຮົາ, ບໍ່ເຄີຍໄດ້ບີບບັງຄັບພວກເຮົາ,
ຫລືໄດ້ເຄີຍລັກສິ່ງຂອງໃດໆໄປຈາກມືຂອງຜູ້ໃດເລີຍ." 5ລາວກໍໄດ້ກ່າວແກ່ພວກເຂົາວ່າ, "ພຣະຢາເວຊົງເປັນພະຍານຕໍ່ພວກທ່ານ,
ແລະຜູ້ທີ່ພຣະອົງຊົງເຈີມໄວ້ກໍເປັນພະຍານໃນວັນນີ້, ວ່າພວກທ່ານບໍ່ໄດ້ພົບສິ່ງໃດໃນມືຂອງຂ້າພະເຈົ້າ." ພວກເຂົາໄດ້ຕອບວ່າ,
"ພຣະຢາເວຊົງເປັນພະຍານ."
6ຊາມູເອນກໍໄດ້ກ່າວກັບປະຊາຊົນວ່າ, "ພຣະຢາເວຜູ້ທີ່ໄດ້ຊົງແຕ່ງຕັ້ງໂມເຊກັບອາໂຣນ,
ແລະຜູ້ໄດ້ຊົງນໍາບັນພະບຸຣຸດຂອງພວກທ່ານອອກມາຈາກແຜ່ນດິນເອຢິບ. 7ສະນັ້ນ ບັດນີ້, ພວກທ່ານ ຈົ່ງສະແດງຕົວເອງ,
ເພື່ອທີ່ຂ້ານ້ອຍຈະຮ້ອງຂໍພວກທ່ານຕໍ່ພຣະພັກພຣະຢາເວກ່ຽວກັບພຣະຣາຊະກິດອັນຊອບທັມທັງປວງຂອງພຣະຢາເວ,
ຊຶ່ພຣະອົງໄດ້ຊົງກະທໍາຕໍ່ພວກທ່ານ ແລະ ຕໍ່ບັນພະບູຣຸດທັງຫລາຍຂອງພວກທ່ານ.
8ເມື່ອຢາໂຄບໄດ້ເຂົ້າໄປໃນເອຢິບ, ແລະ ບັນພະບູຣຸດທັງຫລາຍຂອງພວກທ່ານໄດ້ຮ້ອງທູນຕໍ່ພຣະຢາເວ,
ແລ້ວພຣະຢາເວກໍໄດ້ໃຊ້ໂມເຊກັບອາໂຣນ, ຜູ້ຊຶ່ງໄດ້ນໍາບັນພະບູຣຸດຂອງພວກທ່ານອອກຈາກເອຢິບ ແລະ
ພວກເຂົາໄດ້ມາອາສັຍຢູ່ໃນສະຖານທີ່ນີ້. 9ແຕ່ພວກເຂົາໄດ້ລືມພຣະຢາເວພຣະເຈົ້າຂອງພວກເຂົາ;
ພຣະອົງໄດ້ຂາຍພວກເຂົາໄວ້ໃນມືຂອງສີເສຣາ, ແມ່ທັບຂອງກອງທັບແຫ່ງເມືອງຮາໂຊ, ໃນມືຂອງຟີລິສະຕິນ,
ແລະໃນມືຂອງກະສັດແຫ່ງໂມອາບ; ແລະເຂົາເຫລົ່ານີ້ກໍໄດ້ຕໍ່ສູ້ກັບບັນພະບູຣຸດທັງຫລາຍຂອງພວກທ່ານ.
10ພວກເຂົາກໍໄດ້ຮ້ອງທູນຕໍ່ພຣະຢາເວ ແລະໄດ້ກ່າວວ່າ,"ພວກຂ້ານ້ອຍໄດ້ເຮັດບາບແລ້ວ, ເພາະວ່າຂ້ານ້ອຍໄດ້ປະຖິ້ມພຣະຢາເວ
ແລະໄດ້ໄປຮັບໃຊ້ບັນດາພະບາອານ ແລະບັນດາພະອາສະຕາໂຣດ. ແຕ່ບັດນີ້
ຂໍຊ່ວຍກູ້ພວກຂ້ານ້ອຍໃຫ້ພົ້ນຈາກມືຂອງພວກສັດຕຣູຂອງພວກຂ້ານ້ອຍ, ແລະພວກຂ້ານ້ອຍຈະຮັບໃຊ້ພຣະອົງ.' 11ດັ່ງນັ້ນ
ພຣະຢາເວຈຶ່ງໄດ້ສົ່ງເຢຣູບບາອານ, ເບດານ, ເຢັບທາ, ແລະຊາມູເອນ,
ແລະໄດ້ໃຫ້ພວກທ່ານໄດ້ຮັບຊັຍຊະນະເຫນືອພວກສັດຕຣູທີ່ຢູ່ຮອບພວກທ່ານ, ດັ່ງນັ້ນພວກທ່ານຈຶ່ງໄດ້ອາສັຍຢູ່ຢ່າງປອດພັຍ.
12ເມື່ອພວກທ່ານເຫັນນາຮາດວ່າ ກະສັດຂອງປະຊາຊົນອໍາໂມນມາຕໍ່ສູ້ພວກທ່ານ, ພວກທ່ານກໍໄດ້ເວົ້າກັບຂ້າພະເຈົ້າວ່າ, 'ບໍ່ໄດ້!
ກະສັດຈໍາຕ້ອງປົກຄອງເຫນືອພວກເຮົາແທນ' — ເຖິງແມ່ນວ່າ ພຣະຢາເວພຣະເຈົ້າຂອງພວກທ່ານ, ເປັນກະສັດຂອງພວກທ່ານ. 13ບັດນີ້
ນີ້ຄືກະສັດທີ່ພວກທ່ານໄດ້ເລືອກແລ້ວ, ຜູ້ຊຶ່ງພວກທ່ານໄດ້ຮ້ອງຂໍ ແລະ ຜູ້ຊຶ່ງພຣະຢາເວໄດ້ຕັ້ງໃຫ້ເປັນກະສັດໄວ້ເຫນືອພວກທ່ານແລ້ວ.
14ຖ້າພວກທ່ານຢໍາເກງພຣະຢາເວ, ຮັບໃຊ້ພຣະອົງ, ເຊື່ອຟັງພຣະສຸຣະສຽງຂອງພຣະອົງ, ແລະບໍ່ກະບົດຕໍ່ພຣະບັນຊາຂອງພຣະຢາເວ,
ແລ້ວທັງທ່ານ ແລະ ກະສັດຜູ້ປົກຄອງເຫນືອພວກທ່ານ ຈະເປັນຜູ້ຕິດຕາມພຣະຢາເວພຣະເຈົ້າຂອງພວກທ່ານ.
15ຖ້າພວກທ່ານບໍ່ຟັງພຣະສຸຣະສຽງຂອງພຣະຢາເວ, ແຕ່ກະບົດຕໍ່ພຣະບັນຊາຂອງພຣະຢາເວ, ແລ້ວມືຂອງພຣະຢາເວຈະຊົງຕໍ່ສູ້ພວກທ່ານ,
ເຫມືອນທີ່ໄດ້ຕໍ່ສູ້ບັນພະບູຣຸດທັງຫລາຍຂອງພວກທ່ານ.
16ເຖິງແມ່ນບັດນີ້ ພວກທ່ານສະແດງຕົວຂອງພວກທ່ານ ແລະ ເບິ່ງສິ່ງທີ່ຍິ່ງໃຫຍ່ນີ້ ຊຶ່ງພຣະຢາເວຈະກະທໍາຕໍ່ຫນ້າຕໍ່ຕາຂອງພວກທ່ານ.
17ວັນນີ້ບໍ່ແມ່ນຫລືທີ່ເປັນວັນເກັບກ່ຽວເຂົ້າບາເລ້? ຂ້ານ້ອຍຈະຮ້ອງທູນຕໍ່ພຣະຢາເວ, ຂໍພຣະອົງໃຫ້ມີຟ້າຮ້ອງ ແລະ ຝົນມາ.
ແລ້ວພວກເຈົ້າຈະໄດ້ຮູ້ ແລະ ໄດ້ເຫັນວ່າຄວາມຊົ່ວຮ້າຍຂອງພວກທ່ານຫລາຍພຽງໃດ ຊຶ່ພວກທ່ານໄດ້ເຮັດໃນສາຍຕາຂອງພຣະຢາເວ,
ໃນການທີ່ໄດ້ທູນຂໍໃຫ້ມີກະສັດສໍາລັບພວກທ່ານເອງ." 18ດັ່ງນັ້ນ ຊາມູເອນຈຶ່ງໄດ້ຮ້ອງທູນຕໍ່ພຣະຢາເວ; ແລະໃນວັນດຽວກັນນັ້ນ
ພຣະຢາເວໃຫ້ມີຟ້າຮ້ອງແລະ ຝົນມາ. ແລ້ວປະຊາຊົນທັງປວງກໍໄດ້ຢ້ານກົວພຣະຢາເວ ແລະ ຊາມູເອນໃຫຍ່ຫລວງຫລາຍ.
19ແລ້ວປະຊາຊົນທັງປວງໄດ້ເວົ້າກັບຊາມູເອນວ່າ, "ຂໍໃຫ້ທ່ານອະທິຖານເພື່ອຜູ້ຮັບໃຊ້ຂອງທ່ານຕໍ່ພຣະຢາເວພຣະເຈົ້າຂອງທ່ານ,
ເພື່ອພວກເຮົາຈະບໍ່ເຖິງຕາຍ. ເພາະເຮົາໄດ້ເພີ່ມຄວາມຊົ່ວຮ້າຍນີ້ເຂົ້າກັບບາບທັງປວງຂອງພວກເຮົາ
ໃນການຂໍໃຫ້ມີກະສັດສໍາລັບພວກເຮົາ." 20ຊາມູເອນໄດ້ຕອບວ່າ, "ຢ່າຢ້ານເລີຍ. ພວກທ່ານໄດ້ເຮັດຄວາມຊົ່ວຮ້າຍທັງປວງນີ້,
ແຕ່ພວກທ່ານບໍ່ໄດ້ຫັນໄປເສຍຈາກການຕິດຕາມພຣະຢາເວ ແຕ່ໄດ້ຮັບໃຊ້ພຣະຢາເວດ້ວຍສຸດໃຈຂອງພວກທ່ານ.
21ຢ່າຫັນໄປຕິດຕາມສິ່ງໄຮ້ສາຣະ ຊຶ່ງບໍ່ເປັນປະໂຫຍດຫລືຊ່ວຍພວກເຈົ້າໄດ້, ເພາະພວກມັນເປັນສິ່ງໄຮ້ຄ່າ.
22ເພາະໂດຍເຫັນແກ່ພຣະນາມຊື່ອັນຍິ່ງໃຫຍ່ຂອງພຣະອົງ, ພຣະຢາເວຈະບໍ່ປະຖິ້ມປະຊາຊົນຂອງພຣະອົງ,
ເພາະວ່ານີ້ເປັນສິ່ງທີ່ພໍພຣະທັຍພຣະຢາເວທີ່ຈະເຮັດໃຫ້ພວກທ່ານເປັນປະຊາຊົນຂອງພຣະອົງ. 23ສ່ວນຂ້າພະເຈົ້າເອງ,
ຂໍໃຫ້ການເຮັດບາບຕໍ່ສູ້ພຣະຢາເວ ດ້ວຍການຢຸດອະທິຖານເພື່ອພວກທ່ານໄກຫ່າງໄປຈາກຂ້າພະເຈົ້າເຖີດ. ແຕ່ໃນທາງກົງກັນຂ້ວາມ,
ຂ້າພະເຈົ້າຈະສອນເຖິງທາງທີ່ດີແລະຖືກຕ້ອງໃຫ້ແກ່ພວກທ່ານ.
24ພຽງແຕ່ວ່າ ຈົ່ງຢໍາເກງພຣະຢາເວ ແລະ ຮັບໃຊ້ພຣະອົງດ້ວຍຄວາມຈິງ ດ້ວຍສຸດໃຈຂອງພວກທ່ານ.
ຈົ່ງພິຈາຣະນາເຖິງສິ່ງທີ່ຍິ່ງໃຫຍ່ຫລາຍສິ່ງ ຊຶ່ງພຣະອົງໄດ້ກະທໍາແກ່ພວກທ່ານ. 25ແຕ່ຖ້າພວກທ່ານຍັງດື້ດ້ານເຮັດຄວາມຊົ່ວຊ້າອີກ, ທັງພວກທ່ານ
ແລະ ກະສັດຂອງພວກທ່ານຈະຖືກທໍາລາຍໄປເສຍ."


generated on Tue Jun 17 19:01:42 2025

13 [1]ໂຊນມີອາຍຸສາມສິບປີ ເມື່ອພະອົງໄດ້ຂຶ້ນຄອງຣາຊະອຳນາດ; ເມື່ອພະອົງໄດ້ຄອງຣາຊະອຳນາດສີ່ສິບປີເຫນືອອິສະຣາເອນ,
[2]ພະອົງໄດ້ຄັດເລືອກຜູ້ຊາຍອິສະຣາເອນສາມພັນຄົນ. ສອງພັນຄົນໃຫ້ຢູ່ກັບພະອົງທີ່ມິກມາດ ແລະ ໃນເຂດແດນເນີນພູເບັດເອນ,
ອີກຫນຶ່ງພັນຄົນນັ້ນໃຫ້ຢູ່ກັບໂຢນາທານທີ່ເມືອງກິເບອາແຫ່ງເບັນຢາມິນ. ທະຫານທີ່ເຫລືອນັ້ນພະອົງກໍໄດ້ປ່ອຍໃຫ້ກັບເມືອເຮືອນຂອງໃຜລາວ,
ແຕ່ລະຄົນກໍໄດ້ກັບເມືອທີ່ເຕັ້ນຂອງຕົນ.

[3]ໂຢນາທານໄດ້ປາບກອງທັບທະຫານຮັກສາການຂອງພວກຟີລິສະຕິນ ຊຶ່ງຢູ່ທີ່ເກບາພ່າຍແພ້ໄປ ແລະ ຄົນຟີລິສະຕິນໄດ້ຮູ້ເລື່ອງ.
ແລ້ວໂຊນກໍໄດ້ເປົ່າແກທົ່ວແຜ່ນດິນ, ແລະກ່າວວ່າ, "ໃຫ້ຄົນເຮັບເຣີທັງຫລາຍໄດ້ຍິນ."[4]ຄົນອິສະຣາເອນທັງປວງໄດ້ຍິນວ່າ
ໂຊນໄດ້ປາບກອງທະຫານຮັກສາການຂອງຟີລິສະຕິນພ່າຍແພ້ໄປແລ້ວ,
ແລະຄົນອິສະຣາເອນທັງຫມົດກໍໄດ້ກາຍເປັນທີ່ກຽດຊັງຂອງຄົນຟີລິສະຕິນຢ່າງຍິ່ງ.
ແລ້ວເຫລົ່າທະຫານກໍໄດ້ຖືກເອີ້ນອອກມາໃຫ້ສົມທົບກັບໂຊນທີ່ກິນການ.
[5]ຄົນຟີລິສະຕິນໄດ້ລວມພົນເພື່ອຕໍ່ສູ້ຄົນອິສະຣາເອນ; ມີຣົດມ້າຮົບສາມພັນຄັນ, ມີຄົນທີ່ຈະຂັບຣົດມ້າຮົບຫົກພັນຄົນ, ແລະ
ກອງທະຫານກໍມີຢ່າງຫລາຍ ເຫມືອນເມັດຊາຍທີ່ແຄມທະເລ. ພວກເຂົາກໍຍົກກຳລັງຂຶ້ນມາຕັ້ງຢູ່ທີ່ມິກມາດ, ທາງທິດຕາເວັນອອກເບັດທາເວນ.
[6]ເມື່ອຄົນອິສະຣາເອນໄດ້ເຫັນວ່າຕົກຢູ່ໃນຄວາມຫຍຸ້ງຍາກແລ້ວ—ເພາະປະຊາຊົນໄດ້ຖືກກົດດັນ, ແລ້ວປະຊາຊົນກໍໄດ້ລີ້ຢູ່ໃນຖ້ຳ, ໃນພຸ່ມໄມ້,
ໃນກອງຫີນ, ໃນນ້ຳສ້າງ, ແລະໃນຂຸມຕ່າງໆ.[7]ຄົນເຮັບເຣີບາງຄົນໄດ້ຂ້າມແມ່ນ້ຳຢໍແດນໄປຍັງດິນແດນກາດ ແລະ ກີເລອາດ.
ແຕ່ໂຊນກໍຍັງຢູ່ທີ່ກິນການ, ແລະ ປະຊາຊົນທັງຫມົດໄດ້ຕິດຕາມພະອົງໄປຢ່າງຢ້ານກົວ.
[8]ພະອົງໄດ້ລໍຖ້າຢູ່ເຈັດວັນ, ຕາມເວລາທີ່ຊາມູເອນໄດ້ກຳຫນົດໄວ້. ແຕ່ຊາມູເອນບໍ່ໄດ້ມາທີ່ກິນການ,
ແລະປະຊາຊົນກໍກະຈັດກະຈາຍໄປຈາກໂຊນ.[9]ໂຊນຈຶ່ງເວົ້າວ່າ, "ຈົ່ງນຳເຄື່ອງເຜົາບູຊາທັງໂຕ ແລະ ເຄື່ອງສັນຕິບູຊາມາໃຫ້ເຮົາ."
ແລ້ວພະອົງໄດ້ຖວາຍເຄື່ອງເຜົາບູຊາ.[10]ທັນທີທີ່ພະອົງໄດ້ຖວາຍເຄື່ອງເຜົາບູຊາທັງໂຕນັ້ນ ຊາມູເອນກໍໄດ້ມາເຖິງ. ໂຊນອອກໄປຕ້ອນຮັບລາວ ແລະ
ທັກທາຍລາວ.
[11]ແລ້ວຊາມູເອນກ່າວວ່າ,"ພະອົງໄດ້ເຮັດຫຍັງລົງໄປແລ້ວນີ້? ໂຊນໄດ້ຕອບວ່າ, "ເມື່ອຂ້າພະເຈົ້າໄດ້ເຫັນປະຊາຊົນກຳລັງຈາກຂ້າພະເຈົ້າໄປ,
ແລະທ່ານກໍບໍ່ໄດ້ມາພາຍໃນວັນທີ່ກຳຫນົດໄວ້, ແລະຄົນຟີລິສະຕິນກໍໄດ້ຊຸມນຸມກັນທີ່ມິກມາດ,[12]ຂ້າພະເຈົ້າກ່າວວ່າ, 'ບັດນີ້
ຄົນຟີລິສະຕິນຈະຍົກມາຮົບກັບຂ້າພະເຈົ້າທີ່ກິນການ, ແລະຂ້າພະເຈົ້າຍັງບໍ່ໄດ້ຂໍພຣະກະຣຸນາຕໍ່ພຣະຢາເວ.' ດັ່ງນັ້ນ
ຂ້າພະເຈົ້າຈຶ່ງຝືນໃຈຕົນເອງໃຫ້ຂຶ້ນໄປຖວາຍເຄື່ອງເຜົາບູຊາທັງໂຕ."
[13]ແລ້ວຊາມູເອນໄດ້ກ່າວກັບໂຊນວ່າ, "ພະອົງໄດ້ກະທຳສິ່ງທີ່ໂງ່ຈ້າຫລາຍ. ພະອົງບໍ່ໄດ້ຮັກສາພຣະບັນຊາຂອງພຣະຢາເວພຣະເຈົ້າຂອງພະອົງ.
ຊຶ່ງພຣະອົງໄດ້ບັນຊາພະອົງໄວ້ ເພື່ອວ່າພຣະຢາເວຈະໄດ້ສະຖາປະນາການຄອງຣາຊຂອງພະອົງເຫນືອຊົນຊາດອິສະຣາເອນຕະຫລອດໄປ.
[14]ແຕ່ບັດນີ້ ການຄອງຣາຊຂອງພະອົງຈະບໍ່ຕໍ່ເນື່ອງ. ພຣະຢາເວໄດ້ຊອກຫາຊາຍອີກຄົນຫນຶ່ງຕາມຊອບພຣະທັຍຂອງພຣະອົງ ແລະ
ພຣະຢາເວໄດ້ແຕ່ງຕັ້ງຊາຍຄົນນັ້ນໃຫ້ເປັນເຈົ້າຊາຍເຫນືອປະຊາຊົນຂອງເພິ່ນ, ແຕ່ວ່າພະອົງບໍ່ໄດ້ເຊື່ອຟັງໃນສິ່ງທີ່ພຣະເຈົ້າໄດ້ສັ່ງພະອົງໄວ້."
[15]ແລ້ວຊາມູເອນກໍໄດ້ລຸກຂຶ້ນ ແລະ ໄປຈາກກິນການແຫ່ງເຜົ່າເບັນຢາມິນ. ແລ້ວໂຊນກໍໄດ້ນັບປະຊາຊົນທີ່ຢູ່ກັບພະອົງໄດ້ປະມານຫົກຮ້ອຍຄົນ.
[16]ໂຊນ, ກັບໂຢນາທານລູກຊາຍຂອງພະອົງ, ແລະປະຊາຊົນກໍໄດ້ຢູ່ກັບທັງສອງພະອົງ, ຢູ່ໃນເກບາແຫ່ງເຜົ່າເບັນຢາມິນ.
ແຕ່ພວກຟີລິສະຕິນໄດ້ຕັ້ງຄ້າຍຢູ່ທີ່ມິກມາດ.
[17]ມີຫນ່ວຍຈູ່ໂຈມອອກມາຈາກຄ້າຍຂອງພວກຟີລິສະຕິນສາມຫນ່ວຍ. ຫນ່ວຍຫນຶ່ງຫັນຫນ້າໄປທາງໂອຟາ, ສູ່ດິນແດນຊູອັດ.
[18]ອີກຫນ່ວຍຫນຶ່ງຫັນຫນ້າໄປທ່ານເບັດໂຮໂຣນ, ແລະ ອີກຫນ່ວຫນຶ່ງຫັນຫນ້າໄປທາງເຂດແດນ
ຊຶ່ງຢູ່ເຫນືອພູເຂົາເສໂບຍິມທາງໄປຖິ່ນແຫ້ງແລ້ງກັນດານ.
[19]ທົ່ວແຜ່ນດິນອິສະຣາເອນບໍ່ສາມາດຈະຫາຊ່າງຕີເຫລັກໄດ້, ເພາະພວກຟີລິສະຕິນໄດ້ກ່າວວ່າ, "ຢ້ານວ່າ ພວກເຮັບເຣີຈະເຮັດດາບ ຫລື
ຫອກສຳລັບພວກເຂົາ."[20]ແຕ່ຄົນອິສະຣາເອນທັງປວງໄດ້ລົງມາຫາພວກຟີລິສະຕິນ, ແຕ່ລະຄົນໄດ້ຝົນໄຖ, ສຽມ, ຂວານ ແລະ ກ່ຽວ
ຂອງພວກເຂົາ.[21]ຄ່າຈ້າງໃນຝົນນັ້ນສອງສ່ວນສາມເຊກຽນສຳລັບໄຖແລະສຽມ, ແລະຫນຶ່ງສ່ວນສາມສຳລັບສ້ອມສາມງ່າມ, ຂວານ ແລະ
ໄມ້ແສ້ຕີງົວ.
[22]ດັ່ງນັ້ນ ເມື່ອເຖິງວັນເຮັດສົງຄາມ, ບໍ່ມີດາບ ຫລື ຫອກໃນມືຂອງທະຫານທີ່ໄດ້ຢູ່ກັບໂຊນ ແລະ ໂຢນາທານ;
ມີພຽງໂຊນແລະໂຢນາທານລູກຊາຍຂອງພະອົງເທົ່ານັ້ນທີ່ມີອາວຸດ.
[23]ກອງທະຫານຮັກສາການຂອງພວກຟີລິສະຕິນກໍໄດ້ຍົກທັບມາກາຍເມືອງມິກມາດ.


generated on Tue Jun 17 19:01:42 2025

# 14

1ວັນຫນຶ່ງໂຢນາທານລູກຊາຍຂອງໂຊນໄດ້ເວົ້າກັບຜູ້ສົ່ງຂ່າວຫນຸ່ມທີ່ຖືອາວຸດຂອງທ່ານວ່າ, "ມາເຖີດ,
ໃຫ້ເຮົາຂ້າມໄປທີ່ກອງທະຫານຟີລິສະຕິນທີ່ຟັ່ງນັ້ນ." ແຕ່ທ່ານບໍ່ໄດ້ບອກພໍ່ຂອງທ່ານໃຫ້ຮູ້.

2ໂຊນໄດ້ພັກຢູ່ທີ່ຊານເມືອງກີເບອາກ້ອງຕົ້ນພິລາ ຊຶ່ງຢູ່ທີ່ມີໂກນ. ມີທະຫານປະມານຫົກຮ້ອຍຄົນໄດ້ຢູ່ກັບເພິ່ນ,
3ລວມທັງອາຫີຢາລູກຊາຍຂອງອາຫີຕຸບ(ອ້າຍຂອງອີຄາໂບດ) ຜູ້ເປັນລູກຊາຍຂອງຟີເນຫັດ ຜູ້ເປັນລູກຊາຍຂອງເອລີ
ປະໂລຫິດຂອງພຣະຢາເວທີ່ເມືອງຊີໂລ, ຜູ້ທີ່ໄດ້ສວມເສື້ອເອໂຟດ. ປະຊາຊົນບໍ່ຮູ້ວ່າ ໂຢນາທານໄດ້ໄປແລ້ວ.
4ຕາມທາງຂ້າມພູເຂົາແຕ່ລະບ່ອນທີ່ໂຢນາທານຕ້ອງການທີ່ຈະຂ້າມໄປເຖິງກອງທະຫານຮັກສາການຂອງຄົນຟີລິສະຕິນນັ້ນ,
ມີຫນ້າຜາຫີນຢູ່ຟາກຫນຶ່ງ. ມີຫນ້າຜາຫີນຟາກຫນຶ່ງທີ່ມີຊື່ວ່າໂບເຊັດ ແລະ ມີຫນ້າຜາຫີນອີກຍອດຫນຶ່ງຊື່ເສນາ.
5ຫນ້າຜາຫີນຍອດຫນຶ່ງຢູ່ທາງເຫນືອຕໍ່ຫນ້າມິກມາດ, ແລະ ອີກຍອດຫນຶ່ງຢູ່ທາງໃຕ້ ດ້ານຫນ້າເກບາ.
6ໂຢນາທານໄດ້ເວົ້າກັບຜູ້ສົ່ງຂ່າວຫນຸ່ມທີ່ຖືອາວຸດຂອງທ່ານວ່າ, "ມາເຖີດ,
ໃຫ້ເຮົາຂ້າມໄປຍັງກອງທະຫານຮັກສາການພວກນີ້ທີ່ບໍ່ໄດ້ເຂົ້າພິທີຕັດເຖີ້ນ. ບາງທີພຣະຢາເວຈະຊົງກະທໍາໃນນາມຊື່ຂອງພວກເຮົາ,
ເພາະວ່າບໍ່ມີສິ່ງໃດທີ່ຈະຢຸດຢັ້ງພຣະຢາເວໄດ້ຈາກການຊ່ວຍກູ້ ບໍ່ວ່າໂດຍຄົນຫນ້ອຍ ຫລື ຄົນຫລາຍ."7ຜູ້ຖືອາວຸດຂອງທ່ານໄດ້ເວົ້າວ່າ,
"ຂໍໃຫ້ເຮັດທຸກສິ່ງຕາມທີ່ໃຈຂອງພະອົງມີພະປະສົງເຖີ້ນ. ຊົງຫມຸ້ງຫນ້າໄປເຖີດ, ເບິ່ງແມ໋, ຂ້ານ້ອຍຢູ່ກັບພະອົງ,
ພ້ອມທີ່ຈະເຮັດຕາມຄໍາສັ່ງຂອງພະອົງ."
8ແລ້ວໂຢນາທານເວົ້າວ່າ, "ພວກເຮົາຈະຂ້າມໄປຫາພວກທະຫານ, ແລະພວກເຮົາຈະສະແດງຕົວພວກເຮົາໃຫ້ພວກເຂົາ.
9ຖ້າພວກເຂົາເວົ້າກັບພວກເຮົາວ່າ, 'ຈົ່ງລໍຖ້າຢູ່ທີ່ນັ້ນຈົນກວ່າພວກເຮົາຈະມາເຖິງຕົວພວກເຈົ້າ' —
ແລ້ວພວກເຮົາຈະຢືນໃນສະຖານທີ່ຂອງພວກເຮົາ ແລະ ຈະບໍ່ຂຶ້ນໄປຫາພວກເຂົາ.10ແຕ່ຖ້າພວກເຂົາຕອບວ່າ, 'ຈົ່ງຂຶ້ນມາຫາພວກເຮົາ'
ແລ້ວພວກເຮົາຈະຂຶ້ນໄປ; ເພາະວ່າ ພຣະຢາເວໄດ້ມອບພວກເຂົາໄວ້ໃນມືຂອງເຮົາແລ້ວ. ນີ້ຈະເປັນສັນຍານແກ່ເຮົາ."
11ດັ່ງນັ້ນ ທັງສອງຈຶ່ງໄດ້ສະແດງຕົນແກ່ກອງທະຫານຮັກສາການຂອງຄົນຟີລິສະຕິນ. ຄົນຟີລິສະຕິນໄດ້ກ່າວວ່າ, "ເບິ່ງແມ໋,
ພວກເຮັບເຣີໄດ້ອອກມາຈາກຮູທີ່ພວກເຂົາລີ້ແລ້ວ."12ແລ້ວກອງທະຫານຮັກສາການຈຶ່ງໄດ້ຮ້ອງບອກໂຢນາທານ ແລະຜູ້ຖືອາວຸດຂອງພະອົງ ແລະ
ເວົ້າວ່າ, "ຈົ່ງຂຶ້ນມາຫາພວກເຮົາ, ແລະພວກເຮົາຈະສະແດງບາງສິ່ງໃຫ້ພວກເຈົ້າຮູ້." ໂຢນາທານຈຶ່ງໄດ້ບອກຜູ້ຖືອາວຸດຂອງທ່ານວ່າ,
"ຈົ່ງຕາມຂ້ອຍມາ, ເພາະວ່າພຣະຢາເວໄດ້ມອບພວກເຂົາໄວ້ໃນມືຂອງອິສະຣາເອນແລ້ວ."
13ໂຢນາທານກໍໄດ້ປີນຂຶ້ນໄປດ້ວຍມື ແລະ ຕີນຂອງທ່ານ, ແລະຜູ້ຖືອາວຸດຂອງທ່ານກໍໄດ້ຕາມຫລັງທ່ານໄປດ້ວຍ.
ພວກຟີລິສະຕິນກໍໄດ້ຖືກຂ້າຕາຍຕໍ່ຫນ້າໂຢນາທານ, ແລະຜູ້ຖືອາວຸດຂອງທ່ານກໍໄດ້ຂ້າພວກເຂົາທາງຫລັງລາວ.
14ການໂຈມຕີຄັ້ງທໍາອິດທີ່ໂຢນາທານ ແລະ ຜູ້ຖືອາວຸດຂອງທ່ານ, ໄດ້ຂ້າຜູ້ຊາຍປະມານຊາວຄົນໃນພື້ນທີ່ປະມານເຄິ່ງເຮັກຕາ.
15ແລະໄດ້ເກີດຄວາມຢ້ານກົວພາຍໃນຄ້າຍ, ໃນທົ່ງຫຍ້າ, ແລະໃນປະຊາຊົນທັງຫມົດ. ແມ່ນແຕ່ກອງທະຫານຮັກສາການ ແລະ
ຫນ່ວຍໂຈມຕີກໍໄດ້ຢ້ານກົວດ້ວຍ. ໄດ້ເກີດແຜ່ນດິນໄຫວ, ແລະ ມີການຢ້ານກົວຢ່າງໃຫຍ່ຫລວງ.
16ແລ້ວພວກຍາມຂອງໂຊນທີ່ຢູ່ກີເບອາແຫ່ງເຜົ່າເບັນຢາມິນກໍໄດ້ເບິ່ງຢູ່; ເຫລົ່າທະຫານຂອງຄົນຟີລິສະຕິນກໍແຕກກະຈັດກະຈາຍໄປ, ແລະ
ພວກເຂົາກໍໄດ້ແລ່ນວຸ້ນວາຍໄປມາ.17ແລ້ວໂຊນຈຶ່ງສັ່ງແກ່ປະຊາຊົນທີ່ຢູ່ກັບພະອົງວ່າ, "ຈົ່ງນັບແລະເບິ່ງວ່າ ມີໃຜຫາຍໄປຈາກພວກເຮົາແດ່."
ເມື່ອພວກເຂົາໄດ້ນັບເບິ່ງແລ້ວ, ໂຢນາທານ ແລະ ຜູ້ຖືອາວຸດຂອງທ່ານໄດ້ຫາຍໄປ.
18ໂຊນໄດ້ສັ່ງອາຫີຢາວ່າ, "ຈົ່ງນໍາຫີບພັນທະສັນຍາຂອງພຣະເຈົ້າມາທີ່ນີ້. ເພາະວ່າໃນເວລານັ້ນ
ຫີບພັນທະສັນຍາຂອງພຣະເຈົ້າຍັງຢູ່ກັບປະຊາຊົນອິສະຣາເອນ.19ໃນຂະນະທີ່ໂຊນກໍາລັງເວົ້າກັບປະໂລຫິດຢູ່ນັ້ນ,
ຄວາມວຸ້ນວາຍໃນຄ້າຍຂອງຄົນຟີລິສະຕິນກໍຍັງຄົງດໍາເນີນຢູ່ ແລະ ເພີ່ມທະວີຫລາຍຂຶ້ນ. ແລ້ວໂຊນໄດ້ເວົ້າກັບປະໂລຫິດວ່າ,
"ຈົ່ງຖອນມືຂອງພວກທ່ານອອກກ່ອນ."
20ໂຊນ ແລະ ປະຊາຊົນທັງປວງທີ່ຢູ່ກັບພະອົງກໍໄດ້ມາລວມກັນ ແລະ ໄດ້ເຂົ້າໄປສະຫນາມຮົບ.
ດາບຂອງພວກຟີລິສະຕິນທຸກຄົນກໍຕໍ່ສູ້ເພື່ອຊາວເມືອງຂອງພວກເຂົາເອງ. ແລະມີຄວາມສັບສົນອັນໃຫຍ່.21ບັດນີ້ ພວກເຮັບເຣີເຫລົ່ານັ້ນ
ຜູ້ທີ່ເຄີຍຢູ່ກັບພວກຟີລິສະຕິນກ່ອນຫນ້ານັ້ນ, ແລະຜູ້ທີ່ໄປໃນຄ້າຍກັບພວກເຂົາ, ເຖິງປານນັ້ນ
ພວກເຂົາກໍກັບມາເຂົ້າກັບຄົນອິສະຣາເອນທີ່ຢູ່ຝ່າຍໂຊນ ແລະ ໂຢນາທານ.
22ເມື່ອຄົນອິສະຣາເອນທັງປວງທີ່ໄດ້ລີ້ຢູ່ໃນເຂດແດນພູເຂົາເອຟຣາອິມໄດ້ຍິນວ່າ ຄົນຟີລິສະຕິນກໍາລັງຫນີໄປ,
ແມ່ນແຕ່ພວກເຫລົ່ານີ້ກໍໄດ້ໄລ່ຕິດຕາມພວກເຂົາໃນການສູ້ຮົບ.23ດັ່ງນັ້ນ ພຣະຢາເວໄດ້ຊ່ວຍກູ້ອິສະຣາເອນໃນວັນນັ້ນ,
ແລະສົງຄາມກໍຜ່ານເຖິງເມືອງເບທາເວນໄປ.
24ໃນວັນນັ້ນ ຄົນອິສະຣາເອນຕ້ອງທຸກຍາກ ເພາະໂຊນໃຫ້ພວກປະຊາຊົນໄດ້ສາບານ ແລະ ເວົ້າວ່າ,
"ຖ້າໃຜກິນອາຫານຈົນຮອດເວລາແລງໃນວັນນີ້ ແລະ ເຮົາໄດ້ແກ້ແຄ້ນພວກສັດຕຣູຂອງເຮົາ." ດັ່ງນັ້ນ ບໍ່ມີໃຜໃນກອງທັບໄດ້ກິນອາຫານເລີຍ.
25ແລ້ວພວກປະຊາຊົນທັງຫມົດກໍໄດ້ເຂົ້າມາໃນປ່າ ແລະ ໃນທີ່ນັ້ນມີນ້ໍາເຜິ້ງຢູ່ຕາມພື້ນດິນ.26ເມື່ອພວກປະຊາຊົນເຂົ້າໄປໃນປ່າ,
ນ້ໍາເຜິ້ງກໍາລັງໄຫລຢູ່, ແຕ່ບໍ່ມີຄົນໃດເອົາມືໃສ່ປາກ ເພາະວ່າປະຊາຊົນໄດ້ຢ້ານກົວຄໍາສາບານ.
27ແຕ່ໂຢນາທານບໍ່ໄດ້ຍິນຄໍາສາບານຂອງບິດາຂອງທ່ານທີ່ໄດ້ໃຫ້ແກ່ປະຊາຊົນນັ້ນ. ພະອົງຈຶ່ງແຍ່ປາຍໄມ້ທີ່ຢູ່ມືຂອງທ່ານ ແລະ ຈິ້ມທີ່ຮັງເຜິ້ງ.
ທ່ານກໍໄດ້ເອົາມືຂອງທ່ານໃສ່ປາກຂອງທ່ານ, ແລະ ຕາຂອງທ່ານກໍສະຫວ່າງຂຶ້ນ.28ແລ້ວມີຊາຍຄົນຫນຶ່ງໃນພວກປະຊາຊົນຕອບວ່າ,
"ບິດາຂອງທ່ານໄດ້ໃຫ້ພວກທະຫານສາບານວ່າ, 'ໃຫ້ຜູ້ທີ່ກິນອາຫານໃນວັນນີ້ຖືກສາບແຊ່ງ' ເຖິງແມ່ນວ່າ
ປະຊາຊົນຈະອ່ອນແຮງຈາກຄວາມຫິວກໍຕາມ."
29ແລ້ວໂຢນາທານຈຶ່ງໄດ້ເວົ້າວ່າ, "ພຣະບິດາຂອງຂ້ອຍໄດ້ເຮັດໃຫ້ເກີດປັນຫາແກ່ແຜ່ນດິນ. ເບິ່ງແມ໋ ວ່າດວງຕາຂອງຂ້ອຍສະຫວ່າງ
ເພາະວ່າຂ້ອຍໄດ້ກິນນ້ໍາເຜິ້ງພຽງຫນ້ອຍດຽວ.30ຈະດີຍິ່ງກວ່ານີ້ອີກເທົ່າໃດ ຖ້າປະຊາຊົນໄດ້ກິນຂອງທີ່ຍຶດມາໄດ້ຈາກພວກສັດຕຣູ
ຊຶ່ງພວກເຂົາຫາມາໄດ້ຢ່າງອິສຣະໃນວັນນີ້? ເພາະວ່າຕອນນີ້ ການຂ້າຟັນຄົນຟີລິສະຕິນນັ້ນບໍ່ຫລາຍແລ້ວ."

[31]ພວກເຂົາໄດ້ຂ້າຄົນຟີລິສະຕິນໃນວັນນັ້ນຈາກມິກມາດ ເຖິງໄອຢາໂລນ. ປະຊາຊົນກໍອ່ອນເພຍຫລາຍທີ່ສຸດ.
[32]ປະຊາຊົນໄດ້ແລ່ນຢ່າງລະໂມບເຂົ້າຫາຂອງທີ່ຍຶດມາໄດ້ ແລະ ໄດ້ເອົາແກະ, ງົວ ແລະ ລູກງົວ, ແລະຂ້າພວກມັນເທິງແຜ່ນດິນ.
ປະຊາຊົນກໍໄດ້ກິນພ້ອມກັບເລືອດ.
[33]ແລ້ວພວກເຂົາກໍໄປບອກໂຊນວ່າ, "ມາເຖີດ, ປະຊາຊົນກຳລັງເຮັດບາບຕໍ່ພຣະຢາເວ ໂດຍໄດ້ກິນອາຫານພ້ອມກັບເລືອດ." ໂຊນໄດ້ສັ່ງວ່າ,
"ພວກເຈົ້າໄດ້ປະພຶດຢ່າງບໍ່ສັດຊື່ແລ້ວ. ບັດນີ້, ຈົ່ງກິ້ງກ້ອນຫີນໃຫຍ່ມາໃຫ້ເຮົາວັນນີ້."[34]ໂຊນໄດ້ເວົ້າອີກວ່າ, "ຈົ່ງອອກໄປທ່າມກາງປະຊາຊົນ
ແລະ ບອກພວກເຂົາວ່າ, 'ຈົ່ງໃຫ້ທຸກຄົນນຳງົວຂອງລາວ ຫລື ແກະຂອງລາວມາຂ້າເສຍທີ່ນີ້, ແລ້ວກິນອາຫານ.
ຢ່າເຮັດບາບຕໍ່ສູ້ພຣະຢາເວໂດຍກິນອາຫານພ້ອມກັບເລືອດ.'" ດັ່ງນັ້ນ ພວກປະຊາຊົນແຕ່ລະຄົນກໍໄດ້ນຳງົວຂອງຕົນມາ
ພ້ອມພວກເຂົາໃນຄືນນັ້ນ ແລະ ໄດ້ຂ້າເສຍທີ່ນັ້ນ.
[35]ໂຊນກໍໄດ້ສ້າງແທ່ນບູຊາຖວາຍແດ່ພຣະຢາເວ, ຊຶ່ງເປັນແທ່ນບູຊາແທ່ນທຳອິດ ຊຶ່ງພະອົງໄດ້ສ້າງຖວາຍແດ່ພຣະຢາເວ.
[36]ແລ້ວໂຊນໄດ້ສັ່ງວ່າ, "ໃຫ້ເຮົາລົງໄປໄລ່ຕາມພວກຟີລິສະຕິນໃນຕອນກາງຄືນ ແລະ ປຸ້ນພວກເຂົາຈົນຮອດຕອນເຊົ້າ;
ຢ່າໃຫ້ພວກເຂົາລອດຊີວິດແມ່ນແຕ່ຄົນດຽວ." ພວກເຂົາໄດ້ຕອບວ່າ, "ຂໍຊົງເຮັດຕາມທີ່ພະອົງເຫັນຊອບເຖີ້ນ." ແຕ່ປະໂລຫິດໄດ້ກ່າວວ່າ,
"ໃຫ້ເຮົາເຂົ້າເຝົ້າພຣະເຈົ້າທີ່ນີ້ເຖີ້ນ."[37]ໂຊນກໍທູນຖາມພຣະເຈົ້າວ່າ, "ສົມຄວນທີ່ຂ້ານ້ອຍຈະໄລ່ຕິດຕາມພວກຟີລິສະຕິນຫລືບໍ່?
ພຣະອົງຈະຊົງມອບພວກເຂົາໄວ້ໃນມືຂອງອິສະຣາເອນຫລື" ແຕ່ພຣະເຈົ້າບໍ່ໄດ້ຕອບພະອົງໃນວັນນັ້ນ.
[38]ແລ້ວໂຊນຈຶ່ງໄດ້ກ່າວວ່າ, "ຈົ່ງມາທີ່ນີ້ເຖີ້ນ, ພວກທ່ານທັງຫມົດທີ່ເປັນຜູ້ນຳຂອງປະຊາຊົນ; ຈົ່ງຮຽນຮູ້ ແລະ
ເບິ່ງວ່າຄວາມບາບນີ້ເກີດຂຶ້ນໄດ້ຢ່າງໃດໃນວັນນີ້.[39]ເພາະວ່າ, ພຣະຢາເວຜູ້ຊົງພຣະຊົນຢູ່, ຜູ້ຊົງຊ່ວຍກູ້ເອົາຄົນອິສະຣາເອນ,
ເຖິງແມ່ນວ່າເປັນໂຢນາທານແມ່ນລູກຊາຍຂອງເຮົາ, ລາວກໍຈະຕ້ອງຕາຍຢ່າງແນ່ນອນ."
ແຕ່ບໍ່ມີໃຜຈັກຫນຶ່ງໃນພວກປະຊາຊົນທັງປວງໄດ້ຕອບພະອົງ.
[40]ແລ້ວພະອົງຈຶ່ງກ່າວກັບຄົນອິສະຣາເອນທັງປວງວ່າ, "ພວກທ່ານຈະຕ້ອງຢູ່ຝ່າຍຫນຶ່ງ, ແລະ
ເຮົາແລະໂຢນາທານລູກຊາຍຂອງເຮົາຈະຢູ່ອີກຝ່າຍຫນຶ່ງ." ປະຊາຊົນໄດ້ເວົ້າກັບໂຊນວ່າ,
"ຂໍເຮັດຕາມທີ່ພະອົງເຫັນຊອບເຖີ້ນ."[41]ດັ່ງນັ້ນໂຊນຈຶ່ງໄດ້ທູນຖາມພຣະຢາເວພຣະເຈົ້າແຫ່ງອິສະຣາເອນວ່າ, "ຂໍສະແດງທູມມີມ."
ໂຢນາທານແລະໂຊນໄດ້ຈັບສະຫລາກ, ແຕ່ຝ່າຍປະຊາຊົນກໍລອດຈາກຖືກເລືອກ.[42]ແລ້ວໂຊນໄດ້ເວົ້າວ່າ, "ໃຫ້ຈັບສະຫລາກ ລະຫວ່າງ
ເຮົາກັບໂຢນາທານລູກຊາຍຂອງເຮົາ." ແລ້ວໂຢນາທານໄດ້ຖືກສະຫລາກນັ້ນ.
[43]ແລ້ວໂຊນຈຶ່ງໄດ້ເວົ້າກັບໂຢນາທານວ່າ, "ຈົ່ງບອກເຮົາວ່າເຈົ້າໄດ້ເຮັດຫຍັງລົງໄປ." ໂຢນາທານກໍໄດ້ບອກພະອົງວ່າ,
"ຂ້ານ້ອຍໄດ້ຊີມນ້ຳເຜິ້ງທີ່ຕິດປາຍໄມ້ຄ້ອນເທົ້າ ຊຶ່ງຢູ່ໃນມືຂອງຂ້າພະເຈົ້າເລັກຫນ້ອຍເທົ່ານັ້ນ. ຂ້ານ້ອຍຢູ່ທີ່ນີ້;
ຂ້ານ້ອຍຍອມທີ່ຈະຕາຍ."[44]ໂຊນໄດ້ກ່າວວ່າ, "ຂໍພຣະເຈົ້າຊົງລົງໂທດ ແລະ ຈະເພີ່ມໂທດນັ້ນໃຫ້ຂ້ານ້ອຍ ຖ້າເຈົ້າບໍ່ຕາຍ, ໂຢນາທານເອີຍ."
[45]ແລ້ວປະຊາຊົນຈຶ່ງໄດ້ກ່າວແກ່ໂຊນວ່າ, "ໂຢນາທານສົມຄວນຕາຍຫລື, ຜູ້ທີ່ໄດ້ນຳຊັຍຊະນະຢ່າງຍິ່ງໃຫຍ່ມາສູ່ອິສະຣາເອນ?
ຢ່າໃຫ້ເປັນຢ່າງນັ້ນເລີຍ! ພຣະຢາເວຊົງພຣະຊົນຢູ່ແນ່ນອນສັນໃດ, ເສັ້ນຜົມຂອງທ່ານຈັກເສັ້ນຫນຶ່ງຈະບໍ່ຕົກເຖິງດິນ,
ເພາະວ່າໃນວັນນີ້ທ່ານໄດ້ເຮັດສິ່ງຄາມດ້ວຍກັນກັບພຣະເຈົ້າ." ດັ່ງນັ້ນ ປະຊາຊົນໄດ້ຊ່ວຍຊີວິດຂອງໂຢນາທານໄວ້ ດັ່ງນັ້ນ ທ່ານຈຶ່ງບໍ່ຕາຍ.
[46]ແລ້ວໂຊນກໍໄດ້ຢຸດໄລ່ຕາມພວກຟີລິສະຕິນ, ແລະ ພວກຟີລິສະຕິນໄດ້ກັບໄປຍັງທີ່ຢູ່ຂອງພວກເຂົາ.
[47]ແລ້ວໂຊນໄດ້ເລີ່ມປົກຄອງເຫນືອຄົນອິສະຣາເອນນັ້ນ, ພະອົງໄດ້ຕໍ່ສູ້ສັດຕຣູທັງຫລາຍຂອງພະອົງທຸກດ້ານ. ພະອົງໄດ້ຕໍ່ສູ້ກັບໂມອາບ,
ຊາວອຳໂມນ, ຊາວເອໂດມ, ກັບບັນດາກະສັດແຫ່ງໂສບາ, ແລະ ຄົນຟີລິສະຕິນ. ບໍ່ວ່າພະອົງຈະຫັນໄປທາງໃດ,
ພະອົງກໍໄດ້ຕີພວກເຂົາແຕກພ່າຍໄປ.[48]ພະອົງສູ້ຮົບຢ່າງກ້າຫານ ແລະ ໄດ້ປາບປາມພວກອາມາເຫລັກ.
ພະອົງໄດ້ຊົງຊ່ວຍກູ້ອິສະຣາເອນໃຫ້ພົ້ນຈາກມືຂອງພວກທີ່ປຸ້ນພວກເຂົາ
[49]ບັນດາລູກຊາຍຂອງໂຊນຄື ໂຢນາທານ, ອິວີ, ແລະ ມັກກີຊວຍ. ຊື່ລູກສາວທັງສອງຂອງພະອົງແມ່ນ ເມຣາບ, ຄືລູກຫົວປີ, ແລະ ຊື່ຜູ້ນ້ອງແມ່ນ
ມີຄາ.[50]ຊື່ເມຍຂອງໂຊນແມ່ນ ອາຫີໂນອາມ; ນາງເປັນລູກສາວຂອງອາຫີມາອັດ. ຊື່ແມ່ທັບຂອງພະອົງແມ່ນອັບເນລູກຊາຍຂອງເນີ, ລຸງຂອງໂຊນ.
[51]ກີເຊຜູ້ເປັນບິດາຂອງໂຊນ; ແລະເນີ, ຜູ້ເປັນບິດາຂອງອັບເນ, ຜູ້ທີ່ເປັນລູກຊາຍຂອງອາບີເອນ.
[52]ຕະຫລອດຣາຊະການຂອງໂຊນ ມີສົງຄາມຢ່າງຮຸນແຮງກັບຄົນຟີລິສະຕິນຢູ່ສະເຫມີ. ເມື່ອໂຊນໄດ້ເຫັນຜູ້ຊາຍຄົນໃດທີ່ເປັນນັກຮົບທີ່ແຂງແຮງ,
ຫລື ເປັນຄົນກ້າຫານ, ພະອົງກໍໄດ້ນຳມາຮັບໃຊ້ພະອົງ.

15 [1]ຊາມູເອນກໍໄດ້ກ່າວກັບໂຊນວ່າ, "ພຣະຢາເວໄດ້ໃຊ້ຂ້າພະເຈົ້າມາເຈີມທ່ານເປັນກະສັດເຫນືອປະຊາຊົນອິສະຣາເອນຂອງພຣະອົງ. ບັດນີ້
ຈົ່ງຟັງຄຳສັ່ງຂອງພຣະຢາເວ. [2]ນີ້ຄືສິ່ງທີ່ພຣະຢາເວຈອມໂຍທາໄດ້ກ່າວວ່າ,
'ເຮົາໄດ້ຈົດຈຳສິ່ງທີ່ອາມາເຫລັກໄດ້ເຮັດຕໍ່ອິສະຣາເອນຄືສະກັດກັ້ນຄົນອິສະຣາເອນລະຫວ່າງທາງ, ເມື່ອພວກເຂົາອອກຈາກແຜ່ນດິນເອຢິບ.
[3]ບັດນີ້ ຈົ່ງໄປ ແລະ ໂຈມຕີອາມາເຫລັກ ແລະ ທຳລາຍທຸກສິ່ງທີ່ພວກເຂົາມີທັງຫມົດ. ຢ່າໄດ້ປານີພວກເຂົາ, ແຕ່ຈົ່ງຂ້າທັງຜູ້ຊາຍ ແລະຜູ້ຍິງ,
ເດັກນ້ອຍແລະແອນ້ອຍ, ງົວແລະແກະ, ອູດແລະລວາດ້ວຍ."

[4]ໂຊນຈຶ່ງໄດ້ເກນປະຊາຊົນ ແລະ ນັບພົນທະຫານທີ່ເມືອງເທລາອີມ: ມີທະຫານຣາບສອງແສນຄົນ, ແລະຄົນໃນເຜົ່າຢູດາສິບພັນຄົນ.
[5]ແລ້ວໂຊນກໍໄດ້ຍົກກອງທັບມາຍັງເມືອງອາມາເຫລັກ ແລະ ໄດ້ລໍຖ້າຢູ່ຮ່ອມພູ.
[6]ແລ້ວໂຊນໄດ້ກ່າວກັບຄົນເຄໄນວ່າ, "ຈົ່ງໄປ, ຈົ່ງແຍກໄປເສຍ, ໃຫ້ອອກໄປຈາກຄົນອາມາເຫລັກ.
ເພື່ອເຮົາຈະບໍ່ທຳລາຍພວກທ່ານໄປພ້ອມກັບພວກເຂົາ. ເພາະພວກທ່ານໄດ້ສະແດງຄວາມເມດຕາຕໍ່ເຊື້ອສາຍອິສະຣາເອນທັງຫມົດ,
ເມື່ອພວກເຂົາໄດ້ອອກມາຈາກແຜ່ນນດິນເອຢິບ." ດັ່ງນັ້ນ ຄົນເຄໄນກໍແຍກອອກໄປຈາກຄົນອາມາເຫລັກ.
[7]ແລ້ວໂຊນກໍໄດ້ບຸກໂຈມຕີຄົນອາມາເຫລັກ, ຕັ້ງແຕ່ຮາວີລາໄປຈົນເຖິງຊູ, ຊຶ່ງຢູ່ດ້ານທິດຕາເວັນອອກຂອງເອຢິບ.
[8]ແລ້ວພະອົງໄດ້ຈັບອາກັກກະສັດຂອງຄົນອາມາເລກທັງເປັນ; ພະອົງໄດ້ທຳລາຍປະຊາຊົນທັງຫມົດດ້ວຍຄົມດາບ. [9]ແຕ່ໂຊນ ແລະ
ປະຊາຊົນໄດ້ໄວ້ຊີວິດອາກັກ, ກັບຝູງແກະທີ່ດີທີ່ສຸດ ແລະ ຝູງງົວທີ່ດີທີ່ສຸດ, ເຫລົ່າລູກງົວທີ່ອ້ວນພີ, ແລະບັນດາແກະ. ທຸກສິ່ງທີ່ດີທັງຫມົດ,
ພວກເຂົາບໍ່ໄດ້ທຳລາຍ. ແຕ່ພວກເຂົາໄດ້ທຳລາຍສິ່ງທີ່ຫນ້າກຽດຊັງ ແລະ ໄຮ້ຄ່າ ຈົນຫມົດກ້ຽງ.
[10]ແລ້ວພຣະທັມຂອງພຣະຢາເວມາຍັງຊາມູເອນ, ກ່າວວ່າ, [11]"ເຮົາເສຍໃຈທີ່ເຮົາໄດ້ຕັ້ງໂຊນເປັນກະສັດ, ເພາະລາວໄດ້ຫັນຈາກການຕິດຕາມເຮົາ
ແລະ ບໍ່ໄດ້ເຮັດຕາມພຣະບັນຍັດຂອງເຮົາ." ຊາມູເອນກໍໂກດຮ້າຍຫລາຍ; ຈຶ່ງໄດ້ຮ້ອງທູນຕໍ່ພຣະຢາເວຕະຫລອດຄືນ.
[12]ຊາມູເອນກໍໄດ້ລຸກຂຶ້ນແຕ່ເຊົ້າໆ ເພື່ອທີ່ຈະໄປຫາໂຊນໃນເຊົ້ານັ້ນ. ຊາມູເອນຖືກບອກວ່າ, "ໂຊນໄດ້ມາທີ່ພູເຂົາກາເມນ ແລະ
ພະອົງໄດ້ມາສ້າງອະນຸສາວະລີຂອງພະອົງເອງ, ແລ້ວກໍໄດ້ຫັນກັບໄປ ແລະ
ໄດ້ມຸ້ງຫນ້າຜ່ານລົງໄປຈົນເຖິງກິນການ." [13]ແລ້ວຊາມູເອນກໍໄດ້ມາຫາໂຊນ, ແລະໂຊນກ່າວກັບເພິ່ນວ່າ, "ຂໍພຣະຢາເວຊົງອວຍພອນທ່ານເຖີດ!
ຂ້າພະເຈົ້າໄດ້ປະຕິບັດຕາມພຣະບັນຊາຂອງພຣະຢາເວແລ້ວ."
[14]ຊາມູເອນໄດ້ຕອບວ່າ, "ຖ້າຢ່າງນັ້ນສຽງແກະນີ້ ທີ່ຮ້ອງເຂົ້າຫູຂອງຂ້າພະເຈົ້າ,
ແລະສຽງງົວທີ່ຂ້າພະເຈົ້າໄດ້ຍິນຄືອັນໃດກັນ?" [15]ໂຊນໄດ້ຕອບວ່າ, "ພວກເຂົາໄດ້ນຳພວກມັນມາຈາກຄົນອາມາເຫລັກ. ເພາະວ່າ
ປະຊາຊົນໄດ້ໄວ້ຊີວິດບັນດາແກະ ແລະ ງົວທີ່ດີທີ່ສຸດ, ເພື່ອໃຫ້ເປັນເຄື່ອງສັດບູຊາແດ່ພຣະຢາເວພຣະເຈົ້າຂອງທ່ານ. ນອກຈາກນັ້ນ
ພວກເຮົາໄດ້ທຳລາຍຫມົດເລີຍ." [16]ແລ້ວຊາມູເອນຈຶ່ງໄດ້ກ່າວກັບໂຊນວ່າ, "ດຽວກ່ອນ, ແລະຂ້າພະເຈົ້າຈະບອກທ່ານວ່າ
ພຣະຢາເວໄດ້ກ່າວກັບຂ້າພະເຈົ້າຢ່າງໃດມື້ຄືນນີ້." ແລະໂຊນກໍໄດ້ກ່າວວ່າ,"ຈົ່ງກ່າວມາເຖີດ!"
[17]ຊາມູເອນໄດ້ກ່າວວ່າ, "ແມ່ນວ່າທ່ານເປັນແຕ່ພຽງຜູ້ເລັກນ້ອຍໃນສາຍຕາຂອງທ່ານເອງ,
ທ່ານບໍ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນຫົວຫນ້າຂອງບັນດາເຜົ່າອິສະຣາເອນຫລື?
ແລ້ວພຣະຢາເວໄດ້ຊົງເຈີມທ່ານໄວ້ເປັນກະສັດເຫນືອອິສະຣາເອນ, [18]ແລະພຣະຢາເວໄດ້ໃຊ້ໃຫ້ທ່ານອອກໄປຕາມທາງຂອງທ່ານໄດ້, 'ຈົ່ງໄປ
ແລະ ຈົ່ງທຳລາຍພວກຄົນບາບ, ຄືຄົນອາມາເຫລັກທັງຫລາຍ, ແລະ
ໃຫ້ຕໍ່ສູ້ກັບພວກເຂົາຈົນກວ່າພວກເຂົາຈະຫມົດສິ້ນໄປ.' [19]ເປັນຫຍັງທ່ານຈຶ່ງບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະຢາເວ, ແຕ່ໄປຢຶດສິ່ງຂອງຕ່າງໆ
ແລະ ເປັນຫຍັງຈຶ່ງໄດ້ເຮັດສິ່ງຄວາມຊົ່ວຮ້າຍໃນພຣະເນດຂອງພຣະຢາເວ?"
[20]ແລ້ວໂຊນກ່າວກັບຊາມູເອນວ່າ, ຂ້າພະເຈົ້າໄດ້ເຊື່ອຟັງພຣະສຸຣະສຽງຂອງພຣະຢາເວແລ້ວ,
ຂ້າພະເຈົ້າໄດ້ໄປຕາມທີ່ພຣະຢາເວໄດ້ຊົງໃຊ້ຂ້າພະເຈົ້າໄປ. ຂ້າພະເຈົ້າໄດ້ຈັບໂຕອາກັກກະສັດແຫ່ງຄົນອາມາເຫລັກມາ,
ແລະຂ້າພະເຈົ້າກໍໄດ້ທຳລາຍຄົນອາມາເລກຫມົດສິ້ນແລ້ວ. [21]ແຕ່ປະຊາຊົນໄດ້ເກັບຂອງທີ່ຢຶດບາງສ່ວນ—ແກະແລະງົວ,
ສິ່ງທີ່ດີທີ່ສຸດຈາກສິ່ງທີ່ຕ້ອງຖືກທຳລາຍນັ້ນ, ເພື່ອນຳມາເປັນເຄື່ອງບູຊາແດ່ພຣະຢາເວພຣະເຈົ້າຂອງທ່ານໃນເມືອງກິນການ."
[22]ຊາມູເອນຕອບວ່າ, "ພຣະຢາເວຊົງພໍພຣະທັຍໃນເຄື່ອງເຜົາບູຊາ ແລະ ເຄື່ອງສັດບູຊາທັງຫລາຍ,
ເທົ່າກັບການທີ່ຈະເຊື່ອຟັງພຣະສຸຣະສຽງຂອງພຣະຢາເວຫລື? ເບິ່ງເຖີດ ການເຊື່ອຟັງກໍດີກວ່າເຄື່ອງຖວາຍສັດບູຊາ, ແລະ
ຊຶ່ງຈະເອົາໃຈໃສ່ກໍດີກວ່າໄຂມັນຂອງບັນດາແກະຜູ້ນັ້ນ. [23]ເພາະວ່າ ການກະບົດກໍເປັນເຫມືອນບາບແຫ່ງການຖືເລີກຖືຍາມ, ແລະ
ຄວາມດື້ດ້ານກໍເປັນເຫມືອນບາບຊົ່ວ ແລະ ການຊົ່ວຮ້າຍ. ເພາະເຫດທີ່ທ່ານປະຖິ້ມພຣະທັມຂອງພຣະຢາເວ,
ທ່ານຈຶ່ງຖືກຖອດອອກຈາກຕຳແຫນ່ງກະສັດ."
[24]ແລ້ວໂຊນກ່າວກັບຊາມູເອນວ່າ, "ຂ້າພະເຈົ້າໄດ້ເຮັດບາບແລ້ວ; ເພາະຂ້າພະເຈົ້າຝ່າຝືນພຣະບັນຍັດຂອງພຣະຢາເວ ແລະຖ້ອຍຄຳຂອງທ່ານ,
ເພາະຂ້າພະເຈົ້າຢ້ານປະຊາຊົນ ແລະ ຟັງສຽງຂອງພວກເຂົາ. [25]ບັດນີ້, ຂໍໂຜດອະພັຍບາບໂທດຂອງຂ້າພະເຈົ້າດ້ວຍເຖີ້ນ, ແລະ
ກັບໄປກັບຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ນະມັສະການພຣະຢາເວ."
[26]ຊາມູເອນກ່າວກັບໂຊນວ່າ, "ຂ້າພະເຈົ້າຈະບໍ່ກັບໄປກັບທ່ານ; ເພາະທ່ານໄດ້ປະຖິ້ມພຣະທັມຂອງພຣະຢາເວ, ແລະ
ພຣະຢາເວໄດ້ຖອດທ່ານອອກຈາກການເປັນກະສັດເຫນືອອິສະຣາເອນແລ້ວ." [27]ພໍຊາມູເອນຫັນຫລັງຈະໄປ, ໂຊນກໍດຶງປາຍເສື້ອຂອງທ່ານໄວ້,
ຈົນເສື້ອນັ້ນກໍຂາດ.
[28]ຊາມູເອນໄດ້ກ່າວກັບທ່ານວ່າ, "ໃນວັນນີ້ພຣະຢາເວໄດ້ຈີກອານາຈັກຂອງອິສະຣາເອນຈາກທ່ານເສຍແລ້ວ ແລະ
ໄດ້ມອບໃຫ້ແກ່ຄົນອື່ນທີ່ດີກວ່າທ່ານ. [29]ຍິ່ງກວ່ານັ້ນ, ຄວາມເຂັ້ມແຂງຂອງຄົນອິດສະຣາເອນ ຈະບໍ່ຕົວະ ຫລື ປ່ຽນໃຈຂອງພຣະອົງ; ເພາະວ່າ
ພຣະອົງບໍ່ແມ່ນມະນຸດ, ທີ່ປ່ຽນໃຈຂອງພຣະອົງໄດ້."
[30]ແລ້ວໂຊນໄດ້ກ່າວວ່າ, "ຂ້າພະເຈົ້າເຮັດບາບແລ້ວ, ແຕ່ຕອນນີ້ ຂໍທ່ານໂຜດໃຫ້ກຽຕແກ່ຂ້າພະເຈົ້າ
ຕໍ່ຫນ້າພວກເຖົ້າແກ່ຂອງປະຊາຊົນຂອງຂ້າພະເຈົ້າ ແລະຕໍ່ຫນ້າຄົນອິສະຣາເອນ. ຂໍກັບໄປນຳຂ້າພະເຈົ້າ,

ເພື່ອຂ້າພະເຈົ້າຈະໄດ້ນະມັສະການພຣະຢາເວ ພຣະເຈົ້າຂອງທ່ານ."[31]ດັ່ງນັ້ນ ຊາມູເອນຈຶ່ງໄດ້ກັບໄປນຳໂຊນ,
ແລະໂຊນກໍໄດ້ນະມັສະການພຣະຢາເວ."
[32]ແລ້ວຊາມູເອນໄດ້ກ່າວວ່າ, "ພວກທ່ານຈົ່ງນຳອາກັກກະສັດຂອງຄົນອາມາເຫລັກມາໃຫ້ຂ້າພະເຈົ້າ." ແລະອາກັກກໍເຂົ້າມາຫາທ່ານ
ຖືກລ່າມດ້ວຍໂຊ່ ແລະ ໄດ້ກ່າວວ່າ, "ຄວາມຂົມຂື່ນແຫ່ງຄວາມຕາຍກໍຜ່ານພົ້ນໄປຢ່າງແນ່ນອນແລ້ວ."[33]ຊາມູເອນໄດ້ກ່າວວ່າ,
"ດາບຂອງທ່ານໄດ້ເຮັດໃຫ້ພວກຜູ້ຍິງໄຮ້ບຸດສັນໃດ, ມານດາຂອງທ່ານຈະໄຮ້ບຸດໃນຫມູ່ພວກຜູ້ຍິງສັນນັ້ນ."
ແລ້ວຊາມູເອນກໍຕັດອາກັກເປັນຕ່ອນໆ ຕໍ່ພຣະພັກພຣະຢາເວ ຢູ່ກິນການ.
[34]ຊາມູເອນກໍໄປທີ່ຣາມາ, ແລະໂຊນກໍຂຶ້ນໄປຍັງວັງຂອງພະອົງ ຢູ່ກິບການແຫ່ງໂຊນ.[35]ຊາມູເອນບໍ່ໄດ້ມາພົບໂຊນອີກຈົນເຖິງວັນຕາຍຂອງລາວ.
ເພາະລາວໄດ້ໂສກເສົ້າກ່ຽວກັບໂຊນ. ພຣະຢາເວໄດ້ເສຍພຣະທັຍທີ່ໄດ້ຕັ້ງໂຊນເປັນກະສັດເຫນືອອິສະຣາເອນ.


generated on Tue Jun 17 19:01:42 2025

16 [1]ພຣະຢາເວໄດ້ກ່າວກັບຊາມູເອນວ່າ, "ອີກດົນປານໃດທີ່ເຈົ້າຈະເປັນທຸກເລື່ອງຂອງໂຊນ,
ເຮົາໄດ້ປະຖິ້ມລາວຈາກການເປັນກະສັດເຫນືອອິສະຣາເອນແລ້ວ? ຈົ່ງເຕີມນ້ຳມັນໃຫ້ເຕັມເຂົາສັດຂອງເຈົ້າ ແລະ ໄປ.
ເຮົາຈະສົ່ງເຈົ້າໄປຫາເຢຊີ ຊາວເບັດເລເຮັມ, ເພາະວ່າເຮົາໄດ້ເລືອກກະສັດອົງຫນຶ່ງສຳລັບເຮົາ
ຈາກທ່າມກາງບັນດາລູກຊາຍທັງຫລາຍຂອງລາວ."

[2]ຊາມູເອນໄດ້ເວົ້າວ່າ, "ຂ້ານ້ອຍຈະໄປໄດ້ຢ່າງໃດ? ຖ້າໂຊນໄດ້ຍິນເລື່ອງນີ້, ລາວຈະປຣະຫານຂ້ານ້ອຍເສຍ." ພຣະຢາເວກ່າວວ່າ,
"ຈົ່ງນຳງົວແມ່ໂຕຫນຶ່ງໄປກັບເຈົ້າ ແລະ ກ່າວວ່າ, 'ຂ້າພະເຈົ້າມາເພື່ອຖວາຍສັດບູຊາແດ່ພຣະຢາເວ.'[3]ຈົ່ງເອີ້ນເຢຊີມາທີ່ການຖວາຍສັດບູຊາ,
ແລະ ເຮົາຈະສຳແດງໃຫ້ເຈົ້າຮູ້ວ່າ ເຈົ້າຈະຕ້ອງເຮັດຢ່າງໃດ. ເຈົ້າຈະເຈີມຜູ້ຊຶ່ງເຮົາຈະບອກເຈົ້າເພື່ອເຮົາ."
[4]ຊາມູເອນກໍໄດ້ເຮັດຕາມທີ່ພຣະຢາເວໄດ້ກ່າວ ແລະ ໄດ້ໄປທີ່ເບັດເລເຮັມ. ພວກເຖົ້າແກ່ຂອງເມືອງນັ້ນກໍຕົວສັ່ນ ໃນຂະນະທີ່ເຂົ້າມາພົບລາວ
ແລະ ໄດ້ກ່າວວ່າ, "ທ່ານມາຢ່າງສັນຕິຫລື?"[5]ລາວກ່າວວ່າ, "ຢ່າງສັນຕິ; ຂ້າພະເຈົ້າມາຖວາຍສັດບູຊາແດ່ພຣະຢາເວ.
ຈົ່ງກຽມພ້ອມຊຳຣະຕົວຂອງພວກທ່ານໃຫ້ບໍຣິສຸດ ແລະມາກັບຂ້າພະເຈົ້າ ເພື່ອໄປຖວາຍສັດບູຊາ." ແລ້ວຊາມູເອນກໍໄດ້ຊຳຣະຕົວເຢຊີ ແລະ
ບັນດາລູກຊາຍຂອງລາວໃຫ້ບໍຣິສຸດ ແລະເຊີນພວກເຂົາໄປຖວາຍສັດບູຊາດ້ວຍ.
[6]ເມື່ອພວກເຂົາໄດ້ມາແລ້ວ, ລາວກໍແນມເຫັນເອລີອາບ ແລະ ໄດ້ກ່າວກັບຕົນເອງວ່າ ຜູ້ທີ່ພຣະຢາເວຊົງໃຫ້ເຈີມໄວ້ກໍ
ໄດ້ຢືນຢູ່ຂ້າງຫນ້າລາວແລ້ວ.[7]ແຕ່ພຣະຢາເວໄດ້ກ່າວກັບຊາມູເອນວ່າ, "ຢ່າເບິ່ງທີ່ຮູບຮ່າງພາຍນອກຂອງລາວ, ຫລື
ເບິ່ງທີ່ຄວາມສູງສະຫງ່າຂອງຮ່າງກາຍຂອງລາວ; ເພາະພຣະຢາເວໄດ້ປະຕິເສດລາວ. ສຳລັບພຣະຢາເວແລ້ວ
ພຣະອົງບໍ່ໄດ້ເບິ່ງເຫມືອນມະນຸດເບິ່ງ; ມະນຸດເບິ່ງທີ່ຮູບຮ່າງພາຍນອກ, ແຕ່ພຣະຢາເວເບິ່ງທີ່ຈິດໃຈພາຍໃນ."
[8]ແລ້ວເຢຊີກໍເອີ້ນອາບີນາດາບ ແລະໃຫ້ລາວຍ່າງຜ່ານຊາມູເອນ. ແລ້ວຊາມູເອນໄດ້ກ່າວວ່າ,
"ພຣະຢາເວກໍບໍ່ໄດ້ເລືອກຜູ້ນີ້ເຫມືອນກັນ."[9]ແລ້ວເຢຊີກໍໄດ້ໃຫ້ຊາມມາຍ່າງຜ່ານໄປ, ແຕ່ຊາມູເອນກໍໄດ້ກ່າວວ່າ,
"ພຣະຢາເວກໍບໍ່ໄດ້ຊົງເລືອກຄົນນີ້ເຫມືອນກັນ."[10]ແລ້ວເຢຊີໄດ້ໃຫ້ລູກທັງເຈັດຄົນຍ່າງຜ່ານຫນ້າຊາມູເອນ.
ແລ້ວຊາມູເອນໄດ້ບອກກັບເຢຊີວ່າ,"ພຣະຢາເວບໍ່ໄດ້ຊົງເລືອກຄົນໃດເລີຍຈາກຄົນເຫລົ່ານີ້."
[11]ແລ້ວຊາມູເອນໄດ້ກ່າວກັບເຢຊີວ່າ,"ພວກນີ້ເປັນລູກຊາຍທັງຫມົດຂອງເຈົ້າຫລື?" ລາວຕອບວ່າ,"ຍັງມີຄົນສຸດທ້ອງເຫລືອຢູ່,
ແຕ່ລາວກຳລັງລ້ຽງແກະຢູ່." ຊາມູເອນໄດ້ກ່າວກັບເຢຊີວ່າ,"ຈົ່ງໃຊ້ຄົນໄປແລະນຳລາວມາ;
ເພາະພວກເຮົາຈະບໍ່ຍອມນັ່ງຈົນກວ່າລາວຈະມາທີ່ນີ້."[12]ເຢຊີກໍໄດ້ໃຊ້ຄົນໄປແລະໄດ້ນຳລາວມາ.
ເນື່ອງຈາກລູກຊາຍຂອງລາວເປັນຄົນຜິວແດງມີດວງຕາງົດງາມແລະຮູບຮ່າງງາມດີ. ພຣະຢາເວໄດ້ກ່າວວ່າ,"ຈົ່ງລຸກຂຶ້ນ, ຈົ່ງເຈີມລາວ;
ເພາະລາວເປັນຄົນນັ້ນແຫລະ."
[13]ແລ້ວຊາມູເອນຈຶ່ງໄດ້ນຳເຂົາສັດທີ່ມີນ້ຳມັນ ແລະໄດ້ເຈີມລາວໄວ້ທ່າມກາງພວກອ້າຍໆຂອງລາວ.
ພຣະວິນຍານຂອງພຣະຢາເວໄດ້ສວມທັບດາວິດນັບຕັ້ງແຕ່ວັນນັ້ນເປັນຕົ້ນໄປ. ແລ້ວຊາມູເອນກໍໄດ້ລຸກຂຶ້ນແລະໄດ້ກັບໄປທີ່ຣາມາ.
[14]ບັດນີ້ພຣະວິນຍານຂອງພຣະຢາເວຊົງຈາກໂຊນໄປ, ແລະວິນຍານຊົ່ວທີ່ເປັນອັນຕະລາຍຈາກພຣະຢາເວກໍໄດ້ລົບກວນລາວແທນທີ່.
[15]ພວກຜູ້ຮັບໃຊ້ຂອງໂຊນໄດ້ເວົ້າວ່າ,"ເບິ່ງແມ, ວິນຍານທີ່ເປັນອັນຕະຣາຍຈາກພຣະເຈົ້າ ກຳລັງລົບກວນພະອົງຢູ່.
[16]ຂໍໃຫ້ເຈົ້ານາຍຂອງພວກຂ້ານ້ອຍ ຈົ່ງສັ່ງພວກຜູ້ຮັບໃຊ້ຂອງພະອົງໃຫ້ຫາຄົນທີ່ມີຄວາມຊຳນານໃນການດີດພິນ.
ແລ້ວເມື່ອວິນຍານທີ່ເປັນອັນຕະຣາຍຈາກພຣະເຈົ້າມາເຫນືອພະອົງ. ລາວກໍຈະດີດພິນແລະພະອົງຈະດີຂຶ້ນ."
[17]ໂຊນຈຶ່ງໄດ້ສັ່ງພວກຜູ້ຮັບໃຊ້ຂອງພະອົງວ່າ,"ຈົ່ງໄປຫາຊາຍຄົນຫນຶ່ງທີ່ດີດພິນໄດ້ດີແລະນຳລາວມາຫາເຮົາ."[18]ແລ້ວຫນຶ່ງໃນພວກຊາຍຫນຸ່ມໄດ້ຕອບ,
ແລະກ່າວວ່າ, "ຂ້ານ້ອຍໄດ້ເຫັນລູກຊາຍຄົນຫນຶ່ງຂອງເຢຊີຊາວເບັດເລເຮັມ, ຜູ້ຊຶ່ງມີຝີມືໃນການດີດພິນ, ເປັນຄົນແຂງແຮງ, ເປັນຄົນກ້າຫານ,
ເປັນນັກຮົບ, ເປັນຄົນສຸຂຸມໃນການເວົ້າ, ແລະເປັນຄົນມີຫນ້າຕາດີ;
ແລະພຣະຢາເວສະຖິດກັບລາວ."[19]ດັ່ງນັ້ນໂຊນຈຶ່ງໄດ້ສົ່ງພວກຜູ້ສົ່ງຂ່າວໄປຍັງເຢຊີ, ແລະກ່າວວ່າ,"ຈົ່ງສົ່ງດາວິດລູກຊາຍຂອງທ່ານ,
ຜູ້ທີ່ຢູ່ກັບແກະນັ້ນມາຫາເຮົາ."
[20]ເຢຊີກໍໄດ້ຈັດລວາຫນຶ່ງໂຕບັນທຸກເຂົ້າຈີ່, ຖົງຫນັງໃສ່ເຫລົ້າອະງຸ່ນຖົງຫນຶ່ງ, ແລະລູກແບ້ໂຕຫນຶ່ງ,
ແລະໄດ້ສົ່ງໄປກັບດາວິດລູກຊາຍຂອງລາວໃຫ້ຖວາຍແກ່ໂຊນ.[21]ແລ້ວດາວິດກໍໄດ້ມາຫາໂຊນ ແລະເຂົ້າຮັບຫນ້າທີ່ຂອງລາວ.
ໂຊນກໍຮັກດາວິດຫລາຍ, ແລະດາວິດກໍໄດ້ເປັນຄົນຖືເຄື່ອງອາວຸດຂອງໂຊນ.
[22]ໂຊນໄດ້ສົ່ງຂ່າວໄປຫາເຢຊີ, ເວົ້າວ່າ,"ຂໍໃຫ້ດາວິດຢູ່ກັບເຮົາ,
ເພາະລາວເປັນທີ່ພໍໃຈໃນສາຍຕາຂອງເຮົາ."[23]ເມື່ອໃດກໍຕາມທີ່ວິຍານທີ່ເປັນອັນຕະລາຍຈາກພຣະເຈົ້າມາເຫນືອໂຊນ,
ດາວິດກໍຈັບພິນແລະໄດ້ຫລິ້ນ. ດັ່ງນັ້ນໂຊນກໍຮູ້ສຶກສົດຊື່ນຂຶ້ນ, ແລະວິນຍານທີ່ເປັນອັນຕະຣາຍກໍຈາກພະອົງໄປ.

17 [1]ບັດນີ້ ຄົນຟີລິສະຕິນໄດ້ເຕົ້າໂຮມກອງທັບຂອງພວກເຂົາເພື່ອສົງຄາມ. ພວກເຂົາໄດ້ມາເຕົ້າໂຮມກັນຢູ່ທີ່ໂສໂຄ, ຊຶ່ງເປັນຂອງຢູດາ.
ພວກເຂົາໄດ້ມາຕັ້ງຄ້າຍຢູ່ລະຫວ່າງໂສໂຄກັບອາເຊຄາ, ໃນເອແຟັດດຳມີມ.

[2]ໂຊນແລະຄົນອິສະຣາເອນກໍໄດ້ລວມຕົວກັນ ແລະໄດ້ຕັ້ງຄ້າຍຢູ່ທີ່ຮ່ອມພູເອລາ, ແລະວາງແນວຮົບເພື່ອຕໍ່ສູ້ກັບຄົນຟີລິສະຕິນ.
[3]ຄົນຟີລິສະຕິນໄດ້ຢືນຢູ່ທີ່ພູເຂົາອີກຂ້າງຫນຶ່ງ, ແລະອິສະຣາເອນກໍໄດ້ຢືນຢູ່ທີ່ພູເຂົາອີກຂ້າງຫນຶ່ງ ມີຮ່ອມພູຂັ້ນກາງລະຫວ່າງພວກເຂົາທັງສອງ.
[4]ມີຊາຍແຂງແຮງຄົນຫນຶ່ງໄດ້ອອກມາຈາກຄ້າຍຂອງຄົນຟີລິສະຕິນ, ຊາຍຄົນນີ້ຊື່ວ່າ ໂກລີອາດແຫ່ງກາດ, ຜູ້ຊຶ່ງສູງຫົກສອກແລະຫນຶ່ງຄືບ.
[5]ລາວໄດ້ສວມຫມວກທອງແດງເທິງຫົວຂອງລາວ, ແລະໄດ້ໃສ່ເສື້ອເກາະທີ່ເຮັດເປັນວົງຮ້ອຍກັນ.
ເສື້ອເກາະນັ້ນຫນັກປະມານຫ້າພັນເຊເຂັນຈາກທອງແດງ.
[6]ລາວໃສ່ສະນັບແຄ່ງທອງແດງ ແລະມີຫອກຊັດທອງແດງຢູ່ທີ່ບ່າທັງສອງຂ້າງຂອງລາວ.[7]ດ້າມຫອກຂອງລາວນັ້ນໃຫຍ່,
ພ້ອມດ້ວຍເຊືອກຮ້ອຍສຳລັບການຟາດມັນ ເຫມືອນສາຍເທິງໄມ້ມັດຫູກຕຳຜ້າ. ປາຍຫອກເປັນເຫລັກຫນັກປະມານຫົກຮ້ອຍເຊເຂັນ.
ຄົນຖືໂລ່ຂອງລາວກໍຍ່າງນຳຫນ້າລາວໄປ.
[8]ລາວໄດ້ຍືນແລະໄດ້ຮ້ອງມາທາງແນວຫນ້າຂອງອິສະຣາເອນວ່າ, "ເປັນຫຍັງພວກເຈົ້າອອກມາເພື່ອຕຽມເຮັດສົງຄາມ?
ເຮົາບໍ່ແມ່ນຄົນຟີລິສະຕິນຫລື, ແລະພວກເຈົ້າກໍເປັນຂ້າຮັບໃຊ້ຂອງໂຊນບໍ່ແມ່ນບໍ? ຈົ່ງເລືອກຊາຍຄົນຫນຶ່ງແທນພວກເຈົ້າ
ໃຫ້ລາວລົງມາຫາເຮົາ.[9]ຖ້າລາວຊະນະໃນການຕໍ່ສູ້ກັບເຮົາ ແລະ ຂ້າເຮົາໄດ້, ແລ້ວພວກເຮົາຈະເປັນຂ້າຮັບໃຊ້ພວກເຈົ້າ. ແຕ່ຖ້າເຮົາຊະນະ
ແລະຂ້າລາວເສຍ, ແລ້ວພວກເຈົ້າຈະເປັນຜູ້ຮັບໃຊ້ຂອງພວກເຮົາແລະຮັບໃຊ້ພວກເຮົາ."
[10]ອີກຄັ້ງຫນຶ່ງຄົນຟີລິສະຕິນໄດ້ກ່າວວ່າ, "ເຮົາຂໍທ້າກອງທັບອິສະຣາເອນໃນວັນນີ້.
ຈົ່ງສົ່ງຊາຍຄົນຫນຶ່ງມາຕໍ່ສູ້ກັນ."[11]ເມື່ອໂຊນແລະອິສະຣາເອນທັງຫມົດທີ່ໄດ້ຍິນຄົນຟີລິສະຕິນນັ້ນໄດ້ເວົ້າ,
ພວກເຂົາກໍຕົກໃຈແລະຢ້ານກົວຢ່າງໃຫຍ່ຫລວງ.
[12]ບັດນີ້ດາວິດເປັນລູກຂອງເອຟາດທາແຫ່ງເມືອງເບັດເລເຮັມໃນຢູດາ, ຊື່ເຢຊີ. ຜູ້ທີ່ມີລູກຊາຍແປດຄົນ.
ເຢຊີເປັນຄົນມີອາຍຸຫລາຍແລ້ວໃນຣາຊະການຂອງໂຊນ.[13]ລູກຊາຍໃຫຍ່ສາມຄົນຂອງເຢຊີກໍໄດ້ຕາມໂຊນເຂົ້າສູ່ສະຫນາມຮົບ.
ຊື່ຂອງລູກຊາຍສາມຄົນທີ່ໄປເຂົ້າສູ່ສະຫນາມຮົບເອລີອາບລູກຊາຍກົກ, ຜູ້ທີສອງອາບີນາດາບ, ແລະ ຜູ້ທີສາມຊາມມາ.
[14]ດາວິດເປັນລູກຊາຍຫລ້າ. ອ້າຍໆທັງສາມຄົນກໍໄດ້ຕິດຕາມໂຊນໄປ.[15]ບັດນີ້ດາວິດໄດ້ໄປໆກັບໆລະຫວ່າງກອງທັບຂອງໂຊນ
ແລະລ້ຽງແກະຂອງພໍ່ທີ່ເບັດເລເຮັມ, ເພື່ອທີ່ຈະລ້ຽງດູພວກມັນ.[16]ເປັນເວລານານເຖິງສີ່ສິບວັນທີ່ຄົນຟີລິສະຕິນ
ຜູ້ທີ່ແຂງແຮງຄົນນັ້ນໄດ້ມາໃກ້ທັງຕອນເຊົ້າ ແລະ ຕອນແລງ ເພື່ອທ້າທາຍໃຫ້ຄົນອອກໄປສູ້ກັບລາວ.
[17]ແລ້ວເຢຊີໄດ້ເວົ້າກັບດາວິດລູກຂອງຕົນວ່າ, "ຈົ່ງນຳເຂົ້າຂົ້ວຫນຶ່ງເອຟານີ້ ແລະເຂົ້າຈີ່ສິບກ້ອນນີ້,
ແລະນຳໄປໃຫ້ພວກອ້າຍໆຂອງເຈົ້າທີ່ຄ້າຍໄວໆ.[18]ພ້ອມກັນນັ້ນ ຈົ່ງນຳເນີຍແຂງສິບກ້ອນນີ້ໄປໃຫ້ຜູ້ບັງຄັບກອງພັນຂອງພວກເຂົາດ້ວຍເຊັ່ນກັນ.
ຈົ່ງເບິ່ງວ່າ ພວກອ້າຍໆຂອງເຈົ້າທຸກສຸກຢ່າງໃດ ແລະຈົ່ງນຳຫລັກຖານທີ່ສະແດງວ່າພວກເຂົາສະບາຍດີກັບມາດ້ວຍ.
[19]ພວກອ້າຍຂອງເຈົ້າຢູ່ກັບໂຊນກັບຄົນອິສະຣາເອນທັງປວງທີ່ຮ່ອມພູເອລາ, ສູ້ຮົບກັບຄົນຟີລິສະຕິນ."[20]ດາວິດຈຶ່ງລຸກຂຶ້ນແຕ່ເຊົ້າມືດ
ແລະປະຖິ້ມຝູງສັດໃຫ້ຢູ່ໃນຄວາມດູແລຂອງຄົນລ້ຽງແກະ. ລາວໄດ້ເອົາສະບຽງອາຫານ ແລະໄດ້ຈາກໄປ, ຕາມທີ່ເຢຊີໄດ້ສັ່ງລາວ.
ລາວໄດ້ມາເຖິງຄ້າຍ ຂະນະເມື່ອກອງທັບກຳລັງຈະອອກໄປແນວຮົບໂຫ່ຮ້ອງເພື່ອເຮັດສົງຄາມ.
[21]ແລ້ວອິສະຣາເອນກັບຄົນຟີລິສະຕິນຕ່າງກໍໄດ້ຕັ້ງແນວຮົບຜະເຊີນຫນ້າກັນ.
[22]ດາວິດກໍໄດ້ປະຖິ້ມເຄື່ອງຂອງໄວ້ກັບຜູ້ດູແລອຸປະກອນທັງຫລາຍ, ໄດ້ແລ່ນໄປທີ່ກອງທັບ, ແລະໄດ້ທັກທາຍພວກອ້າຍໆຂອງຕົນ.
[23]ເມື່ອລາວກຳລັງເວົ້າກັບພວກອ້າຍ, ຄົນຟີລິສະຕິນທີ່ແຂງແຮງຊາວກາດ, ຊື່ໂກລີອາດ, ແລະໄດ້ອອກມາຈາກແນວຮົບຂອງຄົນຟີລິສະຕິນ,
ແລະກ່າວຖ້ອຍຄຳຢ່າງທີ່ເຄີຍເວົ້າມາກ່ອນແລ້ວ, ແລະດາວິດກໍໄດ້ຍິນ.[24]ເມື່ອຄົນອິສະຣາເອນທັງປວງໄດ້ເຫັນຜູ້ຊາຍຄົນນັ້ນ,
ພວກເຂົາກໍແລ່ນຫນີໄປ ແລະ ຢ້ານກົວລາວຫລາຍ.
[25]ຄົນອິສະຣາເອນໄດ້ເວົ້າວ່າ, "ພວກເຈົ້າເຄີຍເຫັນຊາຍທີ່ອອກມານັ້ນຫລືບໍ່? ລາວໄດ້ອອກມາທ້າທາຍອິສະຣາເອນ.
ກະສັດຈະມອບຄວາມຮັ່ງມີຢ່າງຍິ່ງໃຫ້ແກ່ຜູ້ຊາຍຜູ້ທີ່ຂ້າລາວໄດ້, ແລະພະອົງຈະມອບລູກສາວຂອງພະອົງແຕ່ງງານດ້ວຍ,
ແລະເຮັດໃຫ້ຄອບຄົວຂອງພໍ່ຂອງລາວ ໄດ້ຮັບການຍົກເວັ້ນພາສີໃນອິສະຣາເອນ."
[26]ດາວິດໄດ້ກ່າວແກ່ພວກຜູ້ຊາຍທີ່ຢືນຢູ່ຂ້າງລາວວ່າ,"ລາວຈະເຮັດຢ່າງໃດ ແກ່ຜູ້ຊາຍທີ່ຂ້າຄົນຟີລິສະຕິນຄົນນີ້ໄດ້
ແລະນຳເອົາຄວາມອັບອາຍຂາຍຫນ້າໄປຈາກອິສະຣາເອນ? ຄົນຟີລິສະຕິນຜູ້ບໍ່ເຂົ້າພິທີຕັດຄົນນີ້ເປັນໃຜ
ຈຶ່ງໄດ້ມາທ້າທາຍກອງທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່?"[27]ແລ້ວພວກປະຊາຊົນໄດ້ກ່າວຊ້ຳໃນສິ່ງທີ່ພວກເຂົາໄດ້ເຄີຍເວົ້າ,
ແລະໄດ້ບອກລາວວ່າ,"ດັ່ງທີ່ໄດ້ກ່າວມາແລ້ວ ສຳລັບຜູ້ຊາຍທີ່ຂ້າລາວໄດ້ຈະໄດ້ຮັບຕາມນັ້ນ."
[28]ເອລີອາບອ້າຍກົກໄດ້ຍິນດາວິດເວົ້າກັບພວກຜູ້ຊາຍທັງຫລາຍ. ເອລີອາບກໍໄດ້ໂກດຮ້າຍດາວິດ, ແລະລາວໄດ້ກ່າວວ່າ,
"ເຈົ້າລົງມາທີ່ນີ້ເຮັດຫຍັງ? ເຈົ້າໄດ້ປະຖິ້ມແກະຈຳນວນຫນ້ອຍດຽວໄວ້ກັບໃຜໃນຖິ່ນແຫ້ງແລ້ງກັນດານນັ້ນ?
ຂ້ອຍເອງຮູ້ເຖິງຄວາມອວດດີຂອງເຈົ້າ, ແລະຄວາມຄິດຊົ່ວໃນໃຈຂອງເຈົ້າ;
ເພາະເຈົ້າໄດ້ລົງມາເພື່ອທີ່ເຈົ້າຈະມາເບິ່ງສົງຄາມ."[29]ດາວິດຈຶ່ງໄດ້ຕອບວ່າ,"ຕອນນີ້ຂ້ອຍໄດ້ເຮັດຫຍັງຫລືຍັງ?
ຂ້ອຍກໍພຽງແຕ່ຖາມບໍ່ແມ່ນຫລື?"[30]ລາວຈຶ່ງໄດ້ຫັນໄປຫາຄົນອື່ນເສຍ, ແລະໄດ້ເວົ້າຢ່າງດຽວກັນ.
ປະຊາຊົນກໍໄດ້ຕອບລາວເຫມືອນຢ່າງຄາວກ່ອນ.
[31]ເມື່ອຖ້ອຍຄຳທີ່ດາວິດໄດ້ເວົ້ານັ້ນໄດ້ຍິນທົ່ວກັນ, ບັນດາທະຫານໄດ້ເລົ່າໃຫ້ໂຊນຟັງ, ແລະພະອົງຈຶ່ງໃຫ້ນຳດາວິດເຂົ້າມາ.
[32]ແລ້ວດາວິດກໍໄດ້ທູນໂຊນວ່າ,"ຢ່າໃຫ້ຈິດໃຈຂອງໃຜຢ້ານໄປ ເພາະຊາຍຄົນຟີລິສະຕິນຄົນນັ້ນເລີຍ;
ຜູ້ຮັບໃຊ້ຂອງພະອົງຈະໄປສູ້ຮົບກັບຄົນຟີລິສະຕິນຄົນນີ້."[33]ໂຊນໄດ້ກ່າວກັບດາວິດວ່າ, "ເຈົ້າບໍ່ສາມາດໄປຕໍ່ສູ້ຄົນຟີລິສະຕິນນີ້ ເພື່ອສູ້ຮົບກັບລາວ;
ເພາະເຈົ້າເປັນພຽງເດັກຫນຸ່ມ, ແລະລາວເປັນນັກຮົບມາຕັ້ງແຕ່ຍັງເປັນຊາຍຫນຸ່ມ."

[34]ແຕ່ດາວິດໄດ້ຕອບໂຊນວ່າ,"ຜູ້ຮັບໃຊ້ຂອງທ່ານເຄີຍລ້ຽງຝູງແກະຂອງບິດາ. ເມື່ອສິງໂຕຫລືຫມີໄດ້ມາເອົາລູກແກະໂຕຫນຶ່ງໄປຈາກຝູງ,
[35]ຂ້ານ້ອຍກໍໄດ້ໄລ່ຕິດຕາມມັນໄປ, ແລະຊ່ວຍກູ້ລູກແກະນັ້ນມາຈາກປາກຂອງມັນ. ເມື່ອມັນໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ,
ຂ້ານ້ອຍກໍໄດ້ຈັບຄາງຂອງມັນ, ໄດ້ທຸບຕີມັນ, ແລະໄດ້ຂ້າມັນເສຍ.
[36]ຜູ້ຮັບໃຊ້ຂອງພະອົງໄດ້ເຄີຍຂ້າສິງແລະຫມີມາແລ້ວ. ຄົນຟີລິສະຕິນຜູ້ບໍ່ໄດ້ເຂົ້າພິທີຕັດນີ້ກໍເປັນເຫມືອນສັດເຫລົ່ານັ້ນໂຕຫນຶ່ງ,
ດ້ວຍລາວໄດ້ທ້າທາຍກອງທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່."
[37]ດາວິດໄດ້ເວົ້າວ່າ, "ພຣະຢາເວຜູ້ຊົງຊ່ວຍກູ້ຂ້ານ້ອຍຈາກອົ້ງຕີນຂອງສິງ ແລະຈາກອົ້ງຕີນຂອງຫມີມາແລ້ວ.
ພຣະອົງຈະຊົງຊ່ວຍກູ້ຂ້ານ້ອຍຈາກມືຂອງຄົນຟີລິສະຕິນນີ້." ແລ້ວໂຊນຈຶ່ງໄດ້ກ່າວກັບດາວິດວ່າ,"ຈົ່ງໄປເຖີດ,
ແລະຂໍພຣະຢາເວສະຖິດຢູ່ກັບເຈົ້າ."[38]ໂຊນກໍໄດ້ຊົງສວມຊຸດຍຸດທະພັນຂອງພະອົງໃຫ້ແກ່ດາວິດ.
ພະອົງໄດ້ສວມຫມວກທອງແດງເທິງຫົວຂອງລາວ, ແລະສວມເສື້ອເກາະທີ່ເຮັດເປັນວົງຮ້ອຍດ້ວຍໂສ້ໃຫ້ລາວ.
[39]ດາວິດກໍໄດ້ຄາດດາບທັບຊຸດເກາະຂອງລາວ. ແຕ່ລາວບໍ່ສາມາດຈະຍ່າງໄປໄດ້, ເພາະວ່າລາວບໍ່ໄດ້ຮັບການຝຶກກັບສິ່ງເຫລົ່ານັ້ນ.
ແລ້ວດາວິດຈຶ່ງໄດ້ກ່າວກັບໂຊນວ່າ,"ຂ້ານ້ອຍບໍ່ສາມາດອອກໄປສູ້ຮົບກັບເຄື່ອງເຫລົ່ານີ້ໄດ້,
ເພາະວ່າຂ້ານ້ອຍບໍ່ເຄີຍໄດ້ຝຶກຝົນກັບພວກນີ້ມາກ່ອນ." ດັ່ງນັ້ນດາວິດຈຶ່ງໄດ້ແກ້ພວກມັນອອກ.[40]ລາວຈຶ່ງໄດ້ຖືໄມ້ຄ້ອນເທົ້າໄວ້ໃນມືຂອງລາວ
ແລະໄດ້ເລືອກກ້ອນຫີນກ້ຽງໄດ້ຫ້າກ້ອນຈາກແຄມແມ່ນ້ຳ; ລາວຈຶ່ງໄດ້ໃສ່ໃນຖົງຜູ້ລ້ຽງແກະຂອງລາວ.
ຢາງກະຖຸນຂອງລາວກໍໄດ້ຢູ່ໃນມືຂອງລາວ ເມື່ອລາວໄດ້ອອກໄປຫາຄົນຟີລິສະຕິນ.
[41]ຄົນຟີລິສະຕິນນັ້ນກໍໄດ້ອອກມາໃກ້ດາວິດ, ພ້ອມກັບຄົນຖືໂລ່ຍ່າງນຳຫນ້າລາວໄປ.[42]ເມື່ອຄົນຟີລິສະຕິນໄດ້ເບິ່ງຮອບໆແລະໄດ້ເຫັນດາວິດ,
ກໍດູຫມິ່ນລາວ, ເພາະວ່າລາວເປັນພຽງແຕ່ເດັກນ້ອຍ, ແລະຜິວແດງໆ, ເປັນຄົນຫນ້າຕາດີ.[43]ແລ້ວຄົນຟີລິສະຕິນຈຶ່ງໄດ້ເວົ້າກັບດາວິດວ່າ,
"ຂ້າເປັນຫມາຫລື, ເຈົ້າຈຶ່ງມາຫາຂ້າດ້ວຍໄມ້ຄ້ອນເທົ້າ?," ແລະຄົນຟີລິສະຕິນກໍໄດ້ສາບແຊ່ງດາວິດ ໂດຍໃຊ້ນາມບັນດາພະເຈົ້າຂອງພວກເຂົາ.
[44]ຄົນຟີລິສະຕິນໄດ້ເວົ້າກັບດາວິດວ່າ,"ຈົ່ງມາຫາເຮົາ, ແລະເຮົາຈະເອົາຊີ້ນຂອງເຈົ້າໃຫ້ນົກໃນທ້ອງຟ້າ
ແລະໃຫ້ສັດທັງຫລາຍໃນປ່າ."[45]ດາວິດກໍໄດ້ຕອບຄົນຟີລິສະຕິນຄົນນັ້ນວ່າ,"ທ່ານມາຫາຂ້ານ້ອຍດ້ວຍດາບ, ດ້ວຍຫອກ, ແລະດ້ວຍຫອກຊັດ.
ແຕ່ຂ້ານ້ອຍມາຫາທ່ານໃນພຣະນາມຊື່ແຫ່ງພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງກອງທັບອິສະຣາເອນ, ຜູ້ຊຶ່ງທ່ານໄດ້ທ້າທາຍນັ້ນ.
[46]ໃນວັນນີ້ ພຣະຢາເວຈະມອບໄຊຊະນະເຫນືອເຈົ້າໃຫ້ຂ້ານ້ອຍ, ແລະຂ້ານ້ອຍຈະຂ້າເຈົ້າ ແລະຕັດຫົວຂອງເຈົ້າຈາກລຳຕົວຂອງເຈົ້າ. ໃນວັນນີ້
ຂ້ານ້ອຍຈະເອົາສົບຂອງກອງທັບຟີລິສະຕິນ ໃຫ້ແກ່ນົກໃນອາກາດ ແລະ ແກ່ສັດປ່າທັງຫລາຍແຫ່ງແຜ່ນດິນໂລກ, ເພື່ອທັງໂລກຈະຮູ້ວ່າ
ມີພຣະເຈົ້າອົງຫນຶ່ງໃນອິສະຣາເອນ.[47]ແລະຊຸມນຸມຊົນທັງສິ້ນຈະຮູ້ວ່າ ພຣະຢາເວບໍ່ໄດ້ປະທານໄຊຊະນະດ້ວຍດາບຫລືຫອກ.
ເພາະວ່າການຮົບຄັ້ງນີ້ເປັນຂອງພຣະຢາເວ, ແລະພຣະອົງຈະຊົງມອບພວກທ່ານໄວ້ໃນມືຂອງພວກເຮົາ.
[48]ເມື່ອຄົນຟີລິສະຕິນນັ້ນໄດ້ລຸກຂຶ້ນ ແລະໄດ້ເຂົ້າມາໃກ້ດາວິດ, ແລ້ວດາວິດກໍໄດ້ແລ່ນຢ່າງໄວວາ ເຂົ້າຫາກອງທັບສັດຕຣູເພື່ອປະທະກັນ.
[49]ດາວິດໄດ້ເອົາມືຈົກເຂົ້າໄປໃນຖົງຂອງລາວ, ໄດ້ເອົາຫີນກ້ອນຫນຶ່ງອອກມາ, ໄດ້ຍິງກະຖຸນ, ແລະຖືກຫນ້າຜາກຂອງຄົນຟີລິສະຕິນ.
ກ້ອນຫີນລົບເຂົ້າໄປໃນຫນ້າຜາກຂອງຄົນຟີລິສະຕິນ, ແລະລາວໄດ້ຫລົ້ມຂວໍ້າຫນ້າລົງເຖິງດິນ.
[50]ດາວິດກໍໄດ້ຊະນະຄົນຟີລິສະຕິນດ້ວຍກະຖຸນ ແລະ ກ້ອນຫີນຫນຶ່ງກ້ອນ. ດາວິດໄດ້ຕີຄົນຟີລິສະຕິນແລະຂ້າລາວເສຍ.
ບໍ່ມີດາບຢູ່ໃນມືຂອງດາວິດ.[51]ແລ້ວດາວິດຈຶ່ງໄດ້ແລ່ນໄປ ແລະຢືນຢູ່ເຫນືອຄົນຟີລິສະຕິນ, ແລະໄດ້ຈັບດາບຂອງລາວຊັກອອກມາຈາກຝັກ,
ຂ້າລາວ, ແລະໄດ້ຕັດຫົວຂອງລາວອອກເສຍດ້ວຍດາບ. ເມື່ອພວກຟີລິສະຕິນໄດ້ເຫັນວ່າ ຊາຍທີ່ແຂງແຮງຂອງພວກເຂົາໄດ້ຕາຍແລ້ວ,
ພວກເຂົາກໍໄດ້ຫນີໄປ.
[52]ແລ້ວຄົນອິສະຣາເອນແລະຄົນຢູດາກໍໄດ້ລຸກຂຶ້ນໂຫ່ຮ້ອງ, ແລະໄລ່ຕາມພວກຟີລິສະຕິນໄກໄປຈົນເຖິງຮ່ອມພູ ແລະ ເຖິງທີ່ປະຕູເມືອງເອກໂລນ.
ຄົນຟີລິສະຕິນຕາຍຊະຊາຍຕາມທາງເຖິງຊາອາຣາອີມ, ຕະຫລອດທາງໄປເຖິງກາດແລະເອກໂລນ.
[53]ປະຊາຊົນອິສະຣາເອນໄດ້ກັບມາຈາກການໄລ່ຕິດຕາມຄົນຟີລິສະຕິນ, ແລະພວກເຂົາກໍໄດ້ປຸ້ນຄ້າຍຂອງພວກເຂົາ.
[54]ດາວິດກໍໄດ້ນຳຫົວຂອງຄົນຟີລິສະຕິນ ແລະໄດ້ນຳມານະຄອນເຢຣູຊາເລັມ, ແຕ່ລາວໄດ້ວາງເຄື່ອງອາວຸດຂອງລາວໄວ້ໃນເຕັນຂອງລາວ.
[55]ເມື່ອໂຊນເຫັນດາວິດອອກໄປຕໍ່ສູ້ກັບຄົນຟີລິສະຕິນ, ພະອົງຈຶ່ງໄດ້ຖາມອັບເນແມ່ທັບຂອງທ່ານວ່າ,"ອັບເນ, ຊາຍຫນຸ່ມຄົນນີ້ເປັນລູກຂອງໃຜ?
ອັບເນກ່າວວ່າ,"ຂ້າແດ່ກະສັດ, ພະອົງຊົງມີຊີວິດຢູ່ແນ່ສັນໃດ, ຂ້ານ້ອຍບໍ່ຮູ້."[56]ກະສັດຈຶ່ງໄດ້ກ່າວວ່າ,"ໄປສືບຖາມເບິ່ງວ່າ,
ເດັກຫນຸ່ມຄົນນີ້ເປັນລູກຂອງໃຜ."
[57]ເມື່ອດາວິດໄດ້ກັບມາຈາກການຂ້າພວກຟີລິສະຕິນແລ້ວ, ອັບເນກໍໄດ້ພາຕົວລາວມາ, ແລະໄດ້ນຳເຂົ້າໄປຫາໂຊນ
ພ້ອມດ້ວຍຫົວຂອງຄົນຟີລິສະຕິນໃນມືຂອງລາວ.[58]ໂຊນຈຶ່ງໄດ້ຖາມວ່າ,"ເດັກຫນຸ່ມເອີຍ, ເຈົ້າເປັນລູກຂອງໃຜ?"
ດາວິດໄດ້ຕອບວ່າ,"ຂ້ານ້ອຍເປັນລູກຊາຍຂອງເຢຊີຊາວເບັດເລເຮັມຜູ້ຮັບໃຊ້ຂອງພະອົງ."


generated on Tue Jun 17 19:01:42 2025

18 [1]ເມື່ອດາວິດໄດ້ເວົ້າກັບໂຊນຈົບລົງແລ້ວ, ໃຈຂອງໂຢນາທານກໍຜູກພັນກັບຈິດໃຈຂອງດາວິດ,
ແລະໂຢນາທານຮັກດາວິດເຫມືອນກັບຮັກຊີວິດຂອງຕົນເອງ.[2]ໂຊນກໍໃຫ້ດາວິດໄດ້ເຮັດຫນ້າທີ່ຂອງລາວຕັ້ງແຕ່ວັນນັ້ນ;
ພະອົງບໍ່ຍອມໃຫ້ລາວກັບເມືອບ້ານເຮືອນຂອງບິດາຂອງລາວ.

[3]ແລ້ວໂຢນາທານແລະດາວິດກໍໄດ້ເຮັດພັນທະສັນຍາແຫ່ງມິດຕະພາບ ເພາະພະອົງຮັກລາວເຫມືອນກັບຮັກຊີວິດຂອງພະອົງເອງ.
[4]ໂຢນາທານກໍໄດ້ຖອດເສື້ອຄຸມທີ່ພະອົງສວມຢູ່ ແລະມອບໃຫ້ແກ່ດາວິດພ້ອມທັງເຄື່ອງອາວຸດ, ເຊັ່ນດຽວກັນດາບຂອງພະອົງ, ຄັນທະນູ,
ແລະສາຍແອວ.
[5]ດາວິດກໍໄດ້ອອກໄປທຸກບ່ອນຕາມທີ່ໂຊນສົ່ງລາວໄປ, ແລະລາວປະສົບຄວາມສໍາເລັດ. ໂຊນຈຶ່ງໄດ້ຕັ້ງລາວໃຫ້ເປັນເຫນືອພວກນັກຮົບ.
ນີ້ເປັນທີ່ພໍໃຈໃນສາຍຕາຂອງປະຊາຊົນທັງປວງແລະໃນສາຍຕາຂອງພວກຂ້າຣາຊະການຂອງໂຊນດ້ວຍ.
[6]ເມື່ອພວກເຂົາກັບຈາກການມີຊັຍຊະນະເຫນືອຄົນຟີລິສະຕິນ, ພວກຜູ້ຍິງກໍໄດ້ອອກມາຈາກເມືອງທັງຫມົດຂອງອິສະຣາເອນ,
ຮ້ອງເພງແລະເຕັ້ນລໍາ, ຖວາຍການຕ້ອນຮັບກະສັດໂຊນດ້ວຍການເຕັ້ນລໍາ, ດ້ວຍໃຈຍິນດີ, ແລະດ້ວຍເຄື່ອງດົນຕຣີທັງຫລາຍ.
[7]ພວກຜູ້ຍິງໄດ້ຮ້ອງເພງຈາກບົດຫນຶ່ງໄປອີກບົດຫນຶ່ງ. ພວກນາງໄດ້ຮ້ອງວ່າ, "ໂຊນຂ້າຄົນເປັນພັນໆ, ແລະດາວິດຂ້າຄົນເປັນຫມື່ນໆ."
[8]ໂຊນໂກດຮ້າຍຢ່າງໃຫຍ່, ແລະບົດເພງນີ້ບໍ່ເປັນທີ່ພໍໃຈຂອງພະອົງ. ພະອົງໄດ້ກ່າວວ່າ,"ພວກເຂົາໄດ້ຍົກຍ້ອງດາວິດວ່າຂ້າຄົນເປັນຫມື່ນໆ,
ແຕ່ພວກເຂົາຍົກຍ້ອງເຮົາວ່າ ຂ້າພຽງແຕ່ພັນໆຄົນ. ເຂົາຈະໄດ້ອັນໃດອີກຫລື
ນອກຈາກຣາຊະສົມບັດ?"[9]ໂຊນກໍໄດ້ຈັບຕາເບິ່ງດາວິດດ້ວຍຄວາມສົງສັຍຕັ້ງແຕ່ວັນນັ້ນມາ.
[10]ໃນວັນຕໍ່ມາ ວິນຍານອັນຕະຣາຍຈາກພຣະເຈົ້າກໍໄດ້ເຂົ້າສິງໂຊນ ແລະພະອົງກໍໄດ້ເວົ້າຄືຄົນບ້າຢູ່ໃນວັງຂອງພະອົງ.
ດັ່ງນັ້ນດາວິດກໍໄດ້ຫລິ້ນເຄື່ອງດົນຕຣີຢ່າງທີ່ລາວເຄີຍເຮັດແຕ່ລະວັນ. ໂຊນໄດ້ຖືຫອກຢູ່ໃນມືຂອງພະອົງ.[11]ໂຊນກໍໄດ້ຊັດຫອກ,
ດ້ວຍຫວັງວ່າ,"ຂ້າຈະສຽບດາວິດໃຫ້ຕິດກັບຝາ." ແຕ່ດາວິດຫນີຈາກມືຂອງໂຊນສອງຄັ້ງໃນສະຖານະການແບບນີ້.[12]ໂຊນກໍຢ້ານກົວດາວິດ,
ເພາະວ່າພຣະຢາເວສະຖິດກັບລາວ, ແຕ່ບໍ່ໄດ້ສະຖິດກັບໂຊນອີກແລ້ວ.
[13]ດັ່ງນັ້ນ ໂຊນຈຶ່ງສັ່ງໃຫ້ຍ້າຍດາວິດໄປຈາກພະອົງ ແລະໄດ້ແຕ່ງຕັ້ງລາວໃຫ້ເປັນຜູ້ບັງຄັບບັນຊາກອງພັນ. ໂດຍໃນວິທີນີ້ດາວິດກໍໄດ້ອອກໄປ ແລະ
ໄດ້ກັບມາຢູ່ຕໍ່ຫນ້າປະຊາຊົນ.[14]ດາວິດໄດ້ປະສົບຄວາມສໍາເລັດໃນທຸກໆທາງ, ເພາະພຣະຢາເວໄດ້ສະຖິດກັບລາວ.
[15]ເມື່ອໂຊນໄດ້ເຫັນລາວໄດ້ປະສົບຄວາມສໍາເລັດຢ່າງຕໍ່ເນື່ອງ, ພະອົງກໍຢູ່ໃນກັງວົນປົນກັບຄວາມຢ້ານຕໍ່ລາວ.[16]ແຕ່ຄົນອິສະຣາເອນທັງຫມົດ
ແລະຄົນຢູດາຮັກດາວິດ, ເພາະວ່າລາວໄດ້ອອກໄປແລະໄດ້ກັບມາຕໍ່ຫນ້າພວກເຂົາ.
[17]ແລ້ວໂຊນຈຶ່ງສັ່ງດາວິດວ່າ,"ນີ້ຄືລູກສາວກົກຂອງເຮົາຊື່ເມຣາບ. ເຮົາຈະມອບນາງໃຫ້ເຈົ້າໄວ້ເປັນພັນຣະຍາ.
ຂໍພຽງແຕ່ເຈົ້າຈົ່ງເປັນຄົນກ້າຫານສໍາລັບເຮົາ ແລະຈົ່ງຕໍ່ສູ້ໃນສົງຄາມຂອງພຣະຢາເວ." ເພາະໂຊນຄິດວ່າ, "ຢ່າໃຫ້ມືຂອງເຮົາຕໍ່ສູ້ລາວ,
ແຕ່ໃຫ້ມືຂອງຄົນຟີລິສະຕິນຕໍ່ສູ້ລາວ."[18]ດາວິດຈຶ່ງກ່າວກັບໂຊນວ່າ,"ຂ້ານ້ອຍເປັນໃຜ, ແລະໃຜເປັນວົງຄະນາຍາດຂອງຂ້ານ້ອຍ,
ຫລືຕະກຸນບິດາຂອງຂ້ານ້ອຍໃນອິສະຣາເອນ, ທີ່ຂ້ານ້ອຍຈະເປັນລູກເຂີຍຂອງກະສັດ?"
[19]ແຕ່ເມື່ອເຖິງເວລາທີ່ເມຣາບລູກສາວຂອງໂຊນຄວນຈະຖືກມອບໃຫ້ດາວິດ, ນາງໄດ້ຖືກມອບໃຫ້ເປັນເມຍຂອງອາດີເອນຊາວເມໂຫລາ.
[20]ແຕ່ມີຄາລູກສາວຂອງໂຊນ, ໄດ້ຮັກດາວິດ. ພວກເຂົາໄດ້ບອກໂຊນ, ແລະເລື່ອງນີ້ໄດ້ເປັນທີ່ພໍໃຈຂອງພະອົງ.[21]ແລ້ວໂຊນໄດ້ຄິດໃນໃຈວ່າ,
"ເຮົາຈະຍົກນາງໃຫ້ແກ່ລາວ, ເພື່ອນາງຈະເປັນກັບດັກໃສ່ລາວ, ແລະມືຂອງພວກຟີລິສະຕິນຈະໄດ້ຕໍ່ສູ້ລາວ."
ດັ່ງນັ້ນໂຊນຈຶ່ງສັ່ງແກ່ດາວິດຄັ້ງທີສອງວ່າ,"ເຈົ້າຈະເປັນລູກເຂີຍຂອງເຮົາ."
[22]ໂຊນໄດ້ສັ່ງຄົນໃຊ້ຂອງພະອົງວ່າ,"ຈົ່ງເວົ້າເປັນສ່ວນຕົວກັບດາວິດ ແລະເວົ້າວ່າ,'ເບິ່ງແມ້, ກະສັດພໍໃຈໃນເຈົ້າ.
ແລະບັນດາຜູ້ຮັບໃຊ້ຂອງພະອົງກໍຮັກເຈົ້າ. ບັດນີ້ແລ້ວ ຈົ່ງເປັນລູກເຂີຍຂອງກະສັດເຖີດ.'"
[23]ດັ່ງນັ້ນພວກຄົນໃຊ້ຂອງໂຊນໄດ້ເວົ້າຖ້ອຍຄໍາເຫລົ່ານີ້ແກ່ດາວິດ. ແລ້ວດາວິດເວົ້າວ່າ" ເປັນເລື່ອງເລັກນ້ອຍຢູ່ບໍທີ່ຈະເປັນລູກເຂີຍຂອງກະສັດ,
ດ້ວຍຂ້າພະເຈົ້າເປັນຄົນຍາກຈົນ,
ແລະບໍ່ໄດ້ເປັນທີ່ນັບຖືແຕ່ຢ່າງໃດ?"[24]ພວກຜູ້ຮັບໃຊ້ຂອງໂຊນຈຶ່ງໄດ້ລາຍງານຕໍ່ພະອົງເຖິງຖ້ອຍຄໍາທີ່ດາວິດໄດ້ກ່າວ.
[25]ແລ້ວໂຊນຈຶ່ງໄດ້ສັ່ງວ່າ,"ພວກເຈົ້າຈົ່ງເວົ້າດັ່ງນີ້ແກ່ດາວິດ, 'ກະສັດບໍ່ປຣາຖນາສິນສອດໃດໆ,
ນອກຈາກຫນັງປາຍຫຸ້ມອະໄວຍະວະເພດຂອງຊາຍຊາວຟີລິສະຕິນຫນຶ່ງຮ້ອຍອັນເທົ່ານັ້ນ, ເພື່ອຈະໄດ້ແກ້ແຄ້ນພວກສັດຕຣູຂອງກະສັດ.'"
ບັດນີ້ໂຊນຄິດວ່າ ຈະໃຫ້ດາວິດລົ້ມລົງດ້ວຍມືຂອງພວກຟີລິສະຕິນ.[26]ເມື່ອພວກຜູ້ຮັບໃຊ້ໄດ້ບອກຖ້ອຍຄໍາເຫລົ່ານັ້ນໃຫ້ດາວິດ,
ເລື່ອງນີ້ກໍເປັນທີ່ພໍໃຈດາວິດທີ່ຈະເປັນລູກເຂີຍຂອງກະສັດ."
[27]ກ່ອນເວລາທີ່ກໍາຫນົດໄວ້ຈະຫມົດໄປ, ດາວິດໄດ້ໄປພ້ອມກັບຄົນທັງຫລາຍຂອງລາວ ແລະໄດ້ຂ້າພວກຟີລິສະຕິນສອງຮ້ອຍຄົນ.
ດາວິດກໍໄດ້ນໍາຫນັງປາຍອະໄວຍະວະເພດຊາຍຂອງພວກເຂົາມາ, ແລະໄດ້ຖວາຍເຕັມຈໍານວນໃຫ້ແກ່ກະສັດ,
ດັ່ງນັ້ນກະສັດຈຶ່ງໄດ້ຍົກມີຄາລູກສາວຂອງພະອົງໃຫ້ເປັນພັນລະຍາຂອງດາວິດ.[28]ເມື່ອໂຊນໄດ້ເຫັນ, ແລະຮູ້ວ່າພຣະຢາເວສະຖິດກັບດາວິດ,
ແລະມີຄາລູກສາວຂອງໂຊນ, ໄດ້ຮັກລາວ.[29]ໂຊນກໍຍິ່ງຢ້ານກົວດາວິດຫລາຍຂຶ້ນ. ໂຊນຈຶ່ງໄດ້ເປັນສັດຕຣູຂອງດາວິດຕະຫລອດມາ.
[30]ແລ້ວບັນດາເຈົ້າຊາຍຂອງຟີລິດສະຕິນກໍອອກມາເພື່ອເຮັດສົງຄາມ, ແລະຍິ່ງພວກເຂົາຈະອອກມາຫລາຍຄັ້ງປານໃດ,
ດາວິດກໍໄດ້ປະສົບຄວາມສໍາເລັດຫລາຍກວ່າບັນດາຂ້າຣາຊະການທັງຫມົດຂອງໂຊນ, ດັ່ງນັ້ນ ຊື່ຂອງລາວຈຶ່ງເປັນທີ່ນັບຖືຢ່າງສູງ.


generated on Tue Jun 17 19:01:42 2025

19 [1]ໂຊນໄດ້ກ່າວກັບໂຢນາທານລູກຊາຍຂອງພະອົງ ແລະກັບບັນດາຂ້າຣາຊະການທັງຫມົດຂອງພະອົງວ່າ ພວກເຂົາຄວນຂ້າດາວິດເສຍ.
[2]ແຕ່ໂຢນາທານ, ລູກຊາຍຂອງໂຊນ, ພໍໃຈໃນໂຕຂອງດາວິດ. ດັ່ງນັ້ນ
ໂຢນາທານໄດ້ບອກກັບດາວິດວ່າ,"ໂຊນພໍ່ຂອງຂ້ອຍຫາຊ່ອງທາງທີ່ຈະຂ້າເຈົ້າ. ເພາະສະນັ້ນ ຈົ່ງຣະວັງໃຫ້ດີໃນຕອນເຊົ້າມື້ອື່ນນີ້ ແລະ
ລີ້ໃນບ່ອນທີ່ລັບລີ້.[3]ຂ້ອຍຈະອອກໄປ ແລະຢືນຢູ່ຂ້າງໆພໍ່ຂອງຂ້ອຍໃນທົ່ງນາທີ່ເຈົ້າຢູ່, ແລະຂ້ອຍຈະທູນຂໍພໍ່ກ່ຽວກັບເລື່ອງຂອງເຈົ້າ.
ຖ້າຂ້ອຍຮູ້ເລື່ອງໃດກໍຕາມ, ຂ້ອຍຈະບອກໃຫ້ເຈົ້າຮູ້."

[4]ໂຢນາທານໄດ້ກ່າວຊົມເຊີຍດາວິດຕໍ່ໂຊນຜູ້ເປັນບິດາ ແລະໄດ້ກ່າວກັບພະອົງວ່າ,"ຂໍຢ່າໃຫ້ກະສັດເຮັດບາບຕໍ່ດາວິດຜູ້ຮັບໃຊ້ຂອງພະອົງເລີຍ.
ເພາະວ່າ ດາວິດບໍ່ໄດ້ເຮັດບາບຕໍ່ພະອົງ, ແລະລາວໄດ້ເຮັດການງານທີ່ດີທັງຫລາຍເພື່ອພະອົງ.[5]ເພາະລາວໄດ້ສ່ຽງຊີວິດຂອງລາວ
ແລະໄດ້ຂ້າຄົນຟີລິສະຕິນນັ້ນ. ພຣະຢາເວໄດ້ປຣະທານຊັຍຊະນະທີ່ຍິ່ງໃຫຍ່ສຳລັບອິສະຣາເອນທັງປວງ.
ພະອົງໄດ້ເຫັນແລ້ວແລະກໍໄດ້ຊື່ນຊົມຍິນດີ. ເປັນຫຍັງພະອົງຈະເຮັດບາບຕໍ່ເລືອດທີ່ໄຮ້ຄວາມຜິດໂດຍການຂ້າດາວິດເສຍຢ່າງບໍ່ມີເຫດຜົນ?"
[6]ໂຊນກໍໄດ້ຟັງໂຢນາທານ. ໂຊນປະຕິຍານວ່າ,"ພຣະຢາເວຊົງມີຊີວິດຢູ່ແນ່ນອນສັນໃດ, ລາວຈະບໍ່ຖືກຂ້າ."[7]ແລ້ວໂຢນາທານກໍໄດ້ເອີ້ນດາວິດ,
ແລະໂຢນາທານໄດ້ບອກລາວທຸກສິ່ງ. ໂຢນາທານໄດ້ນໍາດາວິດເຂົ້າມາຫາໂຊນ, ແລະລາວກໍໄດ້ເຂົ້າມາຫາພະອົງຢ່າງແຕ່ກ່ອນ.
[8]ສົງຄາມໄດ້ເກີດຂຶ້ນອີກຄັ້ງ, ແລະດາວິດກໍໄດ້ອອກໄປຕໍ່ສູ້ກັບພວກຟີລິສະຕິນ ແລະ
ໄດ້ປາບປາມພວກເຂົາດ້ວຍການຂ້າຄົນເປັນຈຳນວນຫລວງຫລາຍ.
ພວກເຂົາຈຶ່ງໄດ້ຫນີໄປຕໍ່ຫນ້າລາວ[9]ຕໍ່ມາວິນຍານທີ່ເປັນອັນຕະຣາຍຈາກພຣະຢາເວກໍມາເຫນືອໂຊນ ເມື່ອພະອົງນັ່ງຢູ່ໃນວັງຂອງພະອົງ
ພ້ອມດ້ວຍຫອກຢູ່ໃນມືຂອງພະອົງ, ແລະຂະນະທີ່ດາວິດກໍາລັງຫລິ້ນເຄື່ອງດົນຕຣີຂອງລາວຢູ່.
[10]ໂຊນໄດ້ພະຍາຍາມຊັດຫອກຫມາຍຈະສຽບດາວິດໃຫ້ຕິດຝາດ້ວຍຫອກ, ແຕ່ລາວກໍໄດ້ຫລົບຫອກຂອງໂຊນ,
ດັ່ງນັ້ນໂຊນຈຶ່ງໄດ້ຊັດຫອກຕິດຝາ, ດາວິດກໍໄດ້ຫນີໄປໄດ້ໃນຄືນນັ້ນ.[11]ໂຊນໄດ້ໃຊ້ພວກຜູ້ສົ່ງຂ່າວໄປທີ່ເຮືອນຂອງດາວິດ ເພື່ອເຝົ້າເບິ່ງລາວ
ເພື່ອຈະຂ້າລາວເສຍໃນເວລາເຊົ້າ. ແຕ່ມີຄາພັນຣະຍາຂອງດາວິດໄດ້ບອກລາວວ່າ,"ຖ້າຄືນນີ້ເຈົ້າບໍ່ຫນີເອົາໂຕລອດ, ມື້ອື່ນເຈົ້າຈະຖືກຂ້າຕາຍ.
[12]ດັ່ງນັ້ນ ມີຄາຈຶ່ງໄດ້ຢ່ອນດາວິດລົງທາງປ່ອງຢ້ຽມ. ລາວກໍໄດ້ຫນີໄປ, ແລະຫນີລອດໄປໄດ້.[13]ມີຄາໄດ້ເອົາຮູບເຄົາຣົບຂອງຄົວເຮືອນມາ
ແລະໄດ້ວາງໄວ້ເທິງຕຽງນອນ. ແລ້ວນາງກໍໄດ້ວາງຫມອນເທິງຂົນແບ້ໄວ້ເທິງຫົວຂອງມັນ, ແລະໄດ້ເອົາຜ້າຫົ່ມຄຸມໄວ້.
[14]ເມື່ອໂຊນໄດ້ສົ່ງພວກຜູ້ສົ່ງຂ່າວໄປຈັບດາວິດ, ນາງໄດ້ຕອບວ່າ,"ລາວບໍ່ສະບາຍ."[15]ແລ້ວໂຊນໄດ້ສົ່ງພວກຜູ້ສົ່ງຂ່າວນັ້ນໄປເບິ່ງດາວິດ;
ໄດ້ສັ່ງວ່າ,"ຈົ່ງນໍາເຂົ້າມາຫາເຮົາທັງຕຽງ, ເພື່ອທີ່ເຮົາຈະໄດ້ຂ້າລາວເສຍ."
[16]ເມື່ອພວກຜູ້ສົ່ງຂ່າວໄດ້ເຂົ້າມາ, ນີ້ເດ່, ຮູບເຄົາຣົບຂອງຄົວເຮືອນກໍຢູ່ໃນຕຽງພ້ອມກັບຂົນແບ້ເທິງຫມອນຢູ່ທີ່ຫົວຂອງມັນ.
[17]ໂຊນໄດ້ເວົ້າກັບມີຄາວ່າ,"ເປັນຫຍັງເຈົ້າຈຶ່ງໄດ້ຫລອກລວງເຮົາ ແລະປ່ອຍສັດຕຣູຂອງເຮົາໄປເສຍ, ດັ່ງນັ້ນເຂົາຈຶ່ງໄດ້ຫນີໄປ?"
ມີຄາໄດ້ຕອບໂຊນວ່າ,"ລາວເວົ້າກັບລູກວ່າ, 'ຈົ່ງປ່ອຍຂ້ານ້ອຍໄປ. ຄວນຫລືທີ່ຂ້ານ້ອຍຈະຂ້າເຈົ້າເສຍ?"
[18]ບັດນີ້ ດາວິດກໍຫນີລອດໄປໄດ້, ແລະລາວໄດ້ໄປຫາຊາມູເອນທີ່ຣາມາ ແລະ ໄດ້ເລົ່າໃຫ້ລາວຟັງທຸກສິ່ງທີ່ໂຊນໄດ້ເຮັດຕໍ່ລາວ.
ແລ້ວຊາມູເອນກໍໄດ້ຢູ່ທີ່ນາໂຢດ.[19]ມີຄົນໄປບອກໂຊນວ່າ, "ເບິ່ງແມ໋,
ດາວິດຢູ່ທີ່ນາໂຢດໃນຣາມາ."[20]ແລ້ວໂຊນກໍໄດ້ສົ່ງພວກຜູ້ສົ່ງຂ່າວໄປຈັບດາວິດ.
ເມື່ອພວກເຂົາໄດ້ເຫັນຫມູ່ຂອງພວກຜູ້ປະກາດພຣະທັມກໍາລັງປະກາດພຣະທັມຢູ່ ແລະຊາມູເອນກໍໄດ້ຢືນເປັນຫົວຫນ້າພວກເຂົາ,
ພຣະວິນຍານຂອງພຣະເຈົ້າກໍໄດ້ສວມທັບພວກຜູ້ສົ່ງຂ່າວຂອງໂຊນ, ແລະພວກເຂົາກໍໄດ້ປະກາດພຣະທັມດ້ວຍ.
[21]ເມື່ອໂຊນໄດ້ຮູ້ເລື່ອງນີ້, ພະອົງກໍໄດ້ສົ່ງພວກຜູ້ສົ່ງຂ່າວອື່ນໄປ, ແລະຄົນເຫລົ່ານັ້ນກໍໄດ້ປະກາດພຣະທັມດ້ວຍ. ດັ່ງນັ້ນ
ໂຊນຈຶ່ງສົ່ງພວກຜູ້ສົ່ງຂ່າວໄປເປັນຄັ້ງທີ່ສາມ, ແລະພວກເຂົາກໍໄດ້ປະກາດພຣະທັມດ້ວຍ.[22]ແລ້ວພະອົງກໍໄດ້ໄປທີ່ຣາມາດ້ວຍຕົນເອງ
ແລະໄດ້ມາເຖິງບໍ່ນ້ຳເລິກໃນເມືອງເສຄູ. ພະອົງໄດ້ຖາມວ່າ,"ຊາມູເອນກັບດາວິດຢູ່ບ່ອນໃດ?" ມີບາງຄົນໄດ້ເວົ້າວ່າ,"ເບິ່ງແມ໋,
ພວກເຂົາໄດ້ຢູ່ທີ່ນາໂຢດໃນຣາມາ."
[23]ໂຊນຈຶ່ງໄດ້ໄປນາໂຢດໃນຣາມາ. ແລ້ວພຣະວິນຍານຂອງພຣະເຈົ້າໄດ້ມາເຫນືອພະອົງ,
ແລະຂະນະທີ່ພະອົງໄດ້ໄປຊົງປະກາດພຣະທັມຈົນພະອົງສະເດັດມາເຖິງນາໂຢດທີ່ຣາມາ.[24]ພະອົງໄດ້ແກ້ເຄື່ອງນຸ່ງຂອງພະອົງອອກ
ແລະໄດ້ປະກາດພຣະທັມດ້ວຍ ຕໍ່ຫນ້າຊາມູເອນ. ພະອົງໄດ້ເປືອຍກາຍຢູ່ຕະຫລອດມື້ ແລະຕະຫລອດຄືນ. ນີ້ຄືເຫດຜົນທີ່ວ່າຍ້ອນຫຍັງ
ພວກເຂົາຈຶ່ງໄດ້ຖາມວ່າ, "ໂຊນຢູ່ທ່າມກາງພວກຜູ້ປະກາດພຣະທັມດ້ວຍຫລື?"

 generated on Tue Jun 17 19:01:42 2025

20 [1]ແລ້ວດາວິດກໍໄດ້ຫນີຈາກນາໂຢດໃນເມືອງຣາມາ ແລະໄດ້ມາ ແລະໄດ້ກ່າວຕໍ່ໂຢນາທານວ່າ,"ຂ້າພະເຈົ້າໄດ້ເຮັດສິ່ງໃດຫລື?
ມີຫຍັງເປັນຄວາມຜິດຂອງຂ້າພະເຈົ້າຫລື? ຂ້າພະເຈົ້າໄດ້ເຮັດບາບອັນໃດຕໍ່ບິດາຂອງທ່ານ,
ພະອົງຈຶ່ງຕ້ອງການເອົາຊີວິດຂອງຂ້າພະເຈົ້າ?"[2]ໂຢນາທານໄດ້ຕອບດາວິດວ່າ,"ບໍ່ແມ່ນຢ່າງນັ້ນແນ່ນອນ; ທ່ານຈະບໍ່ຕາຍດອກ.
ບິດາຂອງເຮົາບໍ່ເຄີຍເຮັດເລື່ອງໃຫຍ່ຫລືເລື່ອງນ້ອຍອັນໃດ ໂດຍບໍ່ໄດ້ບອກໃຫ້ເຮົາຮູ້. ເປັນຫຍັງພໍ່ຈະປິດບັງເລື່ອງນີ້ຈາກເຮົາຫລື?
ບໍ່ເປັນດັ່ງນັ້ນແນ່ນອນ."

[3]ດາວິດໄດ້ສາບານອີກຄັ້ງແລະໄດ້ກ່າວວ່າ,"ພໍ່ຂອງທ່ານຮູ້ເລື່ອງນີ້ດີ ຂ້າພະເຈົ້າເປັນທີ່ພໍໃຈໃນສາຍຕາຂອງທ່ານ.
ພະອົງໄດ້ກ່າວວ່າ,"ຢ່າໃຫ້ໂຢນາທານຮູ້ເລື່ອງນີ້, ຢ້ານວ່າລາວຈະໂສກເສົ້າໃຈ.' ແຕ່ທີ່ຈິງກໍຄື ພຣະຢາເວຊົງພຣະຊົນຢູ່ສັນໃດ,
ແລະເທົ່າທີ່ທ່ານມີຊີວິດຢູ່ສັນໃດ, ຍັງເຫລືອອີກພຽງກ້າວດຽວລະຫວ່າງຂ້າພະເຈົ້າກັບຄວາມຕາຍ."
[4]ແລ້ວໂຢນາທານຈຶ່ງໄດ້ກ່າວກັບດາວິດວ່າ, "ບໍ່ວ່າເຈົ້າຈະບອກອັນໃດກໍຕາມ, ຂ້ອຍຈະເຮັດຕາມເພື່ອເຈົ້າ."[5]ດາວິດຈຶ່ງໄດ້ເວົ້າກັບໂຢນາທານວ່າ,
"ມື້ອື່ນເປັນມື້ອອກໃຫມ່, ແລະຂ້າພະເຈົ້າຄວນຈະຕ້ອງນັ່ງຮັບປະທານອາຫານກັບກະສັດ. ແຕ່ຂໍໄດ້ປ່ອຍໃຫ້ຂ້າພະເຈົ້າໄປ,
ເພື່ອທີ່ຂ້າພະເຈົ້າຈະລີ້ຢູ່ໃນທົ່ງນາຈົນເຖິງວັນທີສາມຕອນແລງ.
[6]ຖ້າພໍ່ຂອງທ່ານລະນຶກເຖິງຂ້າພະເຈົ້າແລ້ວ, ແລ້ວຂໍໃຫ້ບອກພະອົງວ່າ,"ດາວິດໄດ້ວິງວອນຂໍລາຂ້ານ້ອຍຮີບກັບໄປເບັດເລເຮັມເມືອງຂອງລາວ;
ເພາະວ່າມັນເປັນເວລາຖວາຍສັດບູຊາປະຈໍາປີຂອງຕະກຸນທັງຫມົດທີ່ນັ້ນ.'[7]ຖ້າພະອົງກ່າວວ່າ, "ດີແລ້ວ," ຜູ້ຮັບໃຊ້ຂອງທ່ານກໍຈະມີສັນຕິສຸກ.
ແຕ່ຖ້າພະອົງໃຈຮ້າຍ, ກໍຈົ່ງຮູ້ວ່າພະອົງຕັດສິນໃນທາງຊົ່ວຮ້າຍແລ້ວ.
[8]ດັ່ງນັ້ນ ຂໍທ່ານເຮັດຢ່າງມີຄວາມເມດຕາແກ່ຜູ້ຮັບໃຊ້ຂອງທ່ານດ້ວຍ.
ເພາະທ່ານໄດ້ນໍາຜູ້ຮັບໃຊ້ຂອງທ່ານເຂົ້າສູ່ພັນທະສັນຍາແຫ່ງພຣະຢາເວກັບທ່ານ. ແຕ່ຖ້າມີຄວາມບາບໃນຕົວຂອງຂ້າພະເຈົ້າ,
ຈົ່ງປຣະຫານຂ້າພະເຈົ້າດ້ວຍໂຕທ່ານເອງ; ເປັນຫຍັງທ່ານຈະນໍາຂ້າພະເຈົ້າໃຫ້ພໍ່ຂອງທ່ານຫລື?[9]ໂຢນາທານຈຶ່ງໄດ້ກ່າວວ່າ,
"ຢ່າໃຫ້ເປັນຢ່າງນັ້ນສໍາລັບເຈົ້າເລີຍ! ຖ້າເຮົາໄດ້ຮູ້ວ່າ ພໍ່ຂອງເຮົາໄດ້ເຮັດການຮ້າຍທີ່ຈະມາເຖິງທ່ານ, ເຮົາຈະບໍ່ບອກເຈົ້າຫລື?"
[10]ແລ້ວດາວິດກໍໄດ້ກ່າວກັບໂຢນາທານວ່າ, "ໃຜຈະບອກຂ້າພະເຈົ້າ ຖ້າພໍ່ຂອງທ່ານຕອບທ່ານຢ່າງຮຸນແຮງ?"[11]ໂຢນາທານໄດ້ກ່າວກັບດາວິດວ່າ,
"ມາເຖີດ, ໃຫ້ເຮົາອອກໄປທີ່ທົ່ງນາ." ດັ່ງນັ້ນ ທັງສອງຈຶ່ງໄດ້ອອກໄປທີ່ທົ່ງນາ.
[12]ໂຢນາທານໄດ້ເວົ້າກັບດາວິດວ່າ, "ຂໍພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ຊົງເປັນພຣະຍານ.
ເມື່ອເຮົາໄດ້ຖາມຄໍາຖາມພໍ່ຂອງເຮົາເວລາປະມານນີ້ໃນມື້ອື່ນ, ຫລືໃນວັນທີສາມ, ເບິ່ງແມ໋, ຖ້າມີອັນໃດດີຕໍ່ດາວິດແລ້ວ,
ຈະບໍ່ໃຊ້ຄົນໄປແຈ້ງເຈົ້າໃຫ້ຮູ້ຫລື?[13]ຖ້າພໍ່ຂອງເຮົາພໍໃຈທີ່ທໍາຮ້າຍເຈົ້າ, ຂໍພຣະຢາເວລົງໂທດແກ່ໂຢນາທານ ແລະ ຊົງເພີ່ມໂທດໃຫ້ດ້ວຍ
ຖ້າເຮົາບໍ່ແຈ້ງໃຫ້ເຈົ້າຮູ້ ແລະສົ່ງເຈົ້າຫນີໄປຢ່າງປອດພັຍ, ເພື່ອທ່ານຈະໄດ້ໄປຢ່າງສັນຕິສຸກ. ຂໍພຣະຢາເວສະຖິດກັບທ່ານ,
ຢ່າງທີ່ພຣະອົງສະຖິດກັບພໍ່ຂອງເຮົາ.
[14]ຖ້າເຮົາຍັງມີຊີວິດຢູ່ຕໍ່ໄປ, ຂໍເຈົ້າຈົ່ງສະແດງຄວາມສັດຊື່ຕໍ່ພັນທະສັນຍາຂອງພຣະຢາເວຕໍ່ເຮົາ, ທີ່ເຮົາຈະບໍ່ຕາຍ?
[15]ຂໍຢ່າຕັດພັນທະສັນຍາແຫ່ງຄວາມສັດຊື່ຂອງເຈົ້າທີ່ມີຕໍ່ເຊື້ອສາຍຂອງເຮົາຕະຫລອດໄປ—ເຖິງແມ່ນວ່າ
ເມື່ອພຣະຢາເວຊົງກໍາຈັດສັດຕຣູທັງປວງຂອງດາວິດຈາກແຜ່ນດິນໂລກແລ້ວກໍຕາມ."[16]ດັ່ງນັ້ນ
ໂຢນາທານຈຶ່ງໄດ້ເຮັດພັນທະສັນຍາກັບເຊື້ອສາຍຂອງດາວິດແລະກ່າວວ່າ, "ຂໍພຣະຢາເວແກ້ແຄ້ນພວກສັດຕຣູຂອງດາວິດ."
[17]ໂຢນາທານກໍໄດ້ໃຫ້ດາວິດປະຕິຍານອີກຄັ້ງຫນຶ່ງໂດຍຄວາມຮັກທີ່ພະອົງມີຕໍ່ລາວ, ເພາະວ່າ
ພະອົງໄດ້ຮັກລາວຢ່າງທີ່ທ່ານໄດ້ຮັກຊີວິດຂອງຕົນເອງ.[18]ແລ້ວໂຢນາທານໄດ້ກ່າວກັບລາວວ່າ, "ມື້ອື່ນເປັນມື້ອອກໃຫມ່ຄໍ່າຫນຶ່ງ.
ເຈົ້າຈະຕ້ອງຂາດໄປ ເພາະບ່ອນນັ່ງຂອງເຈົ້າຈະວ່າງຢູ່.[19]ເມື່ອເຈົ້າໄດ້ຢູ່ຄົບສາມມື້ແລ້ວ, ໃຫ້ເຈົ້າລົງໄປໂດຍໄວ ແລະ
ກັບມາບ່ອນທີ່ເຈົ້າຫລົບລີ້ເມື່ອເຖິງວັນນັ້ນ ແລະຄອຍຖ້າຢູ່ຂ້າງຫີນເອເຊ.
[20]ເຮົາຈະຍິງລູກທະນູສາມດອກໄປຂ້າງໆທີ່ນັ້ນ, ເຫມືອນກັບວ່າເຮົາຍິງເປົ້າ.[21]ແລ້ວເຮົາຈະໃຊ້ເດັກຫນຸ່ມຂອງເຮົາໄປແລະເວົ້າກັບເຂົາວ່າ,
'ຈົ່ງໄປຫາພວກລູກທະນູ,' ຖ້າເຮົາເວົ້າກັບເດັກຫນຸ່ມວ່າ, "ເບິ່ງແມ໋, ພວກລູກທະນູນັ້ນຢູ່ທາງຂ້າງນີ້ຂອງເຈົ້າ; ຈົ່ງໄປເອົາມາ.' ແລ້ວເຈົ້າຈົ່ງມາ;
ເພາະວ່າພຣະຢາເວຊົງພຣະຊົນແນ່ສັນໃດ ທ່ານກໍປອດພັຍແລ້ວ, ບໍ່ມີອັນຕະຣາຍອັນໃດເລີຍ.
[22]ແຕ່ຖ້າເຮົາເວົ້າກັບເດັກຫນຸ່ມຄົນນັ້ນວ່າ, 'ເບິ່ງແມ໋, ພວກລູກທະນູຢູ່ກາຍເຈົ້າໄປ,' ແລ້ວເຈົ້າຈົ່ງໄປຕາມທາງຂອງເຈົ້າ,
ເພາະວ່າພຣະຢາເວໄດ້ສົ່ງເຈົ້າຫນີໄປ.[23]ສ່ວນຂໍ້ຕົກລົງທີ່ເຈົ້າກັບຂ້ອຍໄດ້ເວົ້າກັນນັ້ນ, ເບິ່ງແມ໋,
ພຣະຢາເວຊົງຢູ່ທີ່ນີ້ລະຫວ່າງເຈົ້າແລະຂ້ອຍຕະຫລອດໄປ."
[24]ດາວິດຈຶ່ງໄດ້ຫລົບລີ້ຢູ່ໃນທົ່ງນາ. ເມື່ອເຖິງມື້ອອກໃຫມ່ຫນຶ່ງຄໍ່າ, ກະສັດໄດ້ນັ່ງເພື່ອຮັບປະທານອາຫານ.[25]ກະສັດໄດ້ນັ່ງເທິງບ່ອນນັ່ງຂອງພະອົງ
ເທິງບ່ອນນັ່ງຂ້າງຝາຄືເກົ່າ. ໂຢນາທານໄດ້ຢືນແລະອັບເນໄດ້ນັ່ງຂ້າງໂຊນ. ແຕ່ບ່ອນນັ່ງຂອງດາວິດວ່າງຢູ່.
[26]ໂຊນຍັງບໍ່ໄດ້ເວົ້າອັນໃດໃນວັນນັ້ນ, ເພາະພະອົງຄິດໃນໃຈວ່າ, "ມີເຫດບາງຢ່າງໄດ້ເກີດຂຶ້ນກັບລາວ. ລາວມີມົນທິນ;
ແນ່ນອນລາວມີມົນທິນຢູ່."[27]ແຕ່ໃນວັນທີສອງ, ມື້ຕໍ່ມາຂອງມື້ອອກໃຫມ່ຫນຶ່ງຄໍ່າ, ບ່ອນນັ່ງຂອງດາວິດກໍວ່າງຢູ່.
ໂຊນກໍເວົ້າກັບໂຢນາທານລູກຊາຍຂອງຕົນວ່າ,"ເປັນຫຍັງລູກຂອງເຢຊີບໍ່ໄດ້ມາຮັບປະທານອາຫານທັງວານນີ້ແລະວັນນີ້?"
[28]ໂຢນາທານກໍໄດ້ຕອບໂຊນວ່າ,"ດາວິດວິງວອນຂໍລາຂ້ານ້ອຍໄປຍັງບ້ານເບັດເລເຮັມ.[29]ລາວໄດ້ບອກວ່າ, 'ຂໍປ່ອຍຂ້າພະເຈົ້າໄປ.
ເພາະຕະກຸນຂອງຂ້າພະເຈົ້າມີການຖວາຍສັດບູຊາໃນເມືອງ, ແລະອ້າຍໆຂອງຂ້າພະເຈົ້າໄດ້ສັ່ງຂ້າພະເຈົ້າໃຫ້ໄປທີ່ນັ້ນ. ບັດນີ້,
ຖ້າຂ້າພະເຈົ້າໄດ້ຮັບຄວາມພໍໃຈຈາກທ່ານ, ກໍຂໍໃຫ້ຂ້າພະເຈົ້າໄດ້ໄປ ແລະ ຢ້ຽມຢາມພວກອ້າຍໆຂອງຂ້າພະເຈົ້າ.'
ດ້ວຍເຫດນີ້ລາວຈຶ່ງບໍ່ໄດ້ມາຮ່ວມໂຕະຂອງກະສັດ."
[30]ແລ້ວຄວາມໂກດຮ້າຍກໍພຸ່ງຂຶ້ນຕໍ່ໂຢນາທານ, ແລະພະອົງໄດ້ກ່າວວ່າ,"ເຈົ້າເປັນລູກຊາຍຂອງຍິງຜິດສິລະທັມ ແລະ ກະບົດ! ເຮົາບໍ່ຮູ້ຫລືວ່າ
ເຈົ້າໄດ້ເລືອກບຸດເຢຊີມາເປັນຄວາມອັບອາຍແກ່ເຈົ້າເອງ, ແລະແກ່ແມ່ຜູ້ໃຫ້ກໍາເນີດເຈົ້າ?[31]ເພາະວ່າຕາບໃດທີ່ບຸດເຢຊີມີຊີວິດຢູ່ໃນແຜ່ນດິນ,
ໂຕເຈົ້າຫລືຣາຊະອາຈັກຂອງເຈົ້າຈະຕັ້ງຫມັ້ນຢູ່ບໍ່ໄດ້. ບັດນີ້ແລ້ວ, ຈົ່ງໃຊ້ຄົນໄປຈັບລາວມາໃຫ້ເຮົາ, ເພາະເຂົາຈະຕ້ອງຕາຍແນ່ນອນ."


generated on Tue Jun 17 19:01:42 2025

[32]ໂຢນາທານຈຶ່ງໄດ້ຕອບໂຊນພະບິດາຂອງທ່ານວ່າ,"ເປັນຫຍັງເຂົາຈະຕ້ອງຕາຍ?
ລາວໄດ້ເຮັດຫຍັງຜິດ?"[33]ແຕ່ໂຊນໄດ້ຊັດຫອກໃສ່ທ່ານຫມາຍຈະຂ້າທ່ານເສຍ. ດັ່ງນັ້ນໂຢນາທານຈຶ່ງຮູ້ວ່າ ພະບິດາຂອງຕົນຕັ້ງໃຈຈະຂ້າດາວິດ.
[34]ໂຢນາທານຈຶ່ງໄດ້ລຸກຂຶ້ນຈາກໂຕະດ້ວຍຄວາມໂກດຮ້າຍຢ່າງໃຫຍ່ຫລວງ ແລະບໍ່ໄດ້ກິນຫຍັງເລີຍໃນວັນທີສອງຂອງເດືອນນັ້ນ,
ເພາະຄວາມໂສກເສົ້າໃຈດ້ວຍເລື່ອງຂອງດາວິດ, ເພາະວ່າພະບິດາຂອງທ່ານລົບຫລູ່ກຽດຂອງລາວ.
[35]ຜ່ຮອດຕອນເຊົ້າ, ໂຢນາທານກໍໄດ້ອອກໄປທີ່ທົ່ງນາຕາມທີ່ນັດຫມາຍໄວ້ກັບດາວິດ, ແລະມີເດັກຫນຸ່ມໄປນໍາກັນກັບລາວຄົນຫນຶ່ງ.
[36]ພະອົງໄດ້ເວົ້າກັບເດັກຫນຸ່ມນັ້ນວ່າ, "ຈົ່ງແລ່ນໄປແລະຊອກຫາພວກລູກທະນູທີ່ຂ້ອຍຍິງໄປ." ເມື່ອເດັກຫນຸ່ມນັ້ນແລ່ນໄປ,
ໂຢນາທານໄດ້ຍິງລູກທະນູດອກຫນຶ່ງໄປເກີນຫນ້າເດັກນັ້ນ."[37]ເມື່ອເດັກຫນຸ່ມນັ້ນມາເຖິງບ່ອນທີ່ລູກທະນູ ຊຶ່ງໂຢນາທານໄດ້ຍິງໄປນັ້ນຕົກ,
ໂຢນາທານກໍໄດ້ຮ້ອງໄລ່ຫລັງເດັກຫນຸ່ມນັ້ນແລະກ່າວວ່າ, "ລູກທະນູກາຍເຈົ້າໄປຂ້າງນັ້ນບໍ່ແມ່ນບໍ?"
[38]ແລ້ວໂຢນາທານກໍໄດ້ຮ້ອງໄລ່ຕາມຫລັງເດັກຫນຸ່ມນັ້ນວ່າ, "ຮີບໄວແນ່, ຮີບໄປໄວແດ່, ຢ່າຢູ່ຊ້າ!"
ດັ່ງນັ້ນເດັກຫນຸ່ມຂອງໂຢນາທານກໍໄປເກັບພວກລູກທະນູ ແລະ ໄດ້ກັບມາຫານາຍຂອງຕົນ.[39]ແຕ່ເດັກຫນຸ່ມນັ້ນບໍ່ຮູ້ເລື່ອງໃດທັງນັ້ນ.
ມີພຽງແຕ່ໂຢນາທານ ແລະ ດາວິດເທົ່ານັ້ນທີ່ຮູ້ວ່າເລື່ອງຫຍັງ.[40]ໂຢນາທານກໍໄດ້ມອບເຄື່ອງອາວຸດຂອງທ່ານໃຫ້ເດັກຫນຸ່ມນັ້ນ
ແລະໄດ້ກ່າວກັບລາວວ່າ, "ຈົ່ງໄປ, ຈົ່ງເອົາມັນເຂົ້າໄປໃນເມືອງ."
[41]ທັນທີທີ່ເດັກຫນຸ່ມນັ້ນໄປແລ້ວ, ດາວິດກໍໄດ້ລຸກຂຶ້ນມາຈາກດ້ານຫລັງຂອງກອງຫີນ, ກົ້ມຂາບລົງເຖິງດິນ, ແລະໄດ້ໂຄ້ງຄໍານັບລົງສາມຄັ້ງ.
ພວກເຂົາໄດ້ຈູບຊຶ່ງກັນແລະກັນ, ໄດ້ຮ້ອງໄຫ້ດ້ວຍກັນ, ແຕ່ດາວິດໄດ້ຮ້ອງໄຫ້ຫລາຍກວ່າ.[42]ໂຢນາທານຈຶ່ງໄດ້ກ່າວກັບດາວິດວ່າ,
"ຈົ່ງໄປໂດຍສັນຕິເຖີດ, ເພາະວ່າເຮົາທັງສອງໄດ້ປະຕິຍານໄວ້ແລ້ວໃນພຣະນາມຊື່ແຫ່ງພຣະຢາເວວ່າ,
'ຂໍໃຫ້ພຣະຢາເວຊົງຢູ່ລະຫວ່າງຂ້ອຍກັບເຈົ້າ ແລະລະຫວ່າງເຊື້ອສາຍຂອງຂ້ອຍກັບເຊື້ອສາຍຂອງເຈົ້າສືບໄປເປັນນິດ.'"
ແລ້ວດາວິດກໍໄດ້ລຸກຂຶ້ນແລະໄດ້ຈາກໄປ, ແລະໂຢນາທານກໍໄດ້ເຂົ້າໄປໃນເມືອງ.

 generated on Tue Jun 17 19:01:42 2025

21 [1]ແລ້ວດາວິດກໍໄດ້ມາທີ່ເມືອງໂນບໄປຫາອາຫິເມເລັກປະໂລຫິດ. ອາຫິເມເລັກໄດ້ຕົວສັ່ນເຊັ່ນດ້ວຍຄວາມຢ້ານມາຫາດາວິດ
ແລະໄດ້ກ່າວກັບລາວວ່າ, "ຍ້ອນຫຍັງທ່ານຈຶ່ງມາຄົນດຽວ ແລະບໍ່ມີໃຜມາກັບທ່ານຫລື?"[2]ດາວິດຈຶ່ງໄດ້ເວົ້າກັບອາຫິເມເລັກປະໂລຫິດວ່າ,
"ກະສັດໄດ້ສັ່ງຂ້າພະເຈົ້າໃຫ້ເຮັດພາຣະກິດຢ່າງຫນຶ່ງ ແລະໄດ້ສັ່ງແກ່ຂ້າພະເຈົ້າວ່າ, "ຢ່າໃຫ້ໃຜຮູ້ເຖິງເລື່ອງທີ່ເຮົາໃຊ້ເຈົ້າໄປເຮັດນັ້ນ,
ແລະເລື່ອງທີ່ເຮົາໄດ້ບັນຊາເຈົ້ານັ້ນ.' ຂ້າພະເຈົ້າໄດ້ນັດຫມາຍໄວ້ກັບພວກຄົນຫນຸ່ມໃນສະຖານທີ່ແຫ່ງຫນຶ່ງ.

[3]ບັດນີ້ແລ້ວ ທ່ານມີຫຍັງຢູ່ໃນມືແດ່? ຂໍໃຫ້ເຂົ້າຈີ່ແກ່ຂ້າພະເຈົ້າຈັກຫ້າກ້ອນ, ຫລືອັນໃດກໍໄດ້ທີ່ທ່ານມີຢູ່ທີ່ນີ້."[4]ປະໂລຫິດນັ້ນໄດ້ຕອບດາວິດ ແລະ
ໄດ້ກ່າວວ່າ,"ບໍ່ມີເຂົ້າຈີ່ທໍາມະດາເລີຍ, ແຕ່ມີເຂົ້າຈີ່ບໍຣິສຸດ—ຖ້າໃຫ້ພວກຄົນຫນຸ່ມຮັກສາມັນໃຫ້ຫ່າງຈາກຜູ້ຍິງມາກໍແລ້ວກັນ.
[5]ດາວິດໄດ້ຕອບປະໂລຫິດວ່າ, "ທີ່ຈິງແລ້ວ ພວກຜູ້ຍິງກໍໄດ້ຖືກຮັກສາໃຫ້ຫ່າງຈາກເຮົາໃນຕະຫລອດສາມມື້ທີ່ຜ່ານມາແລ້ວ,
ເຫມືອນຄັ້ງກ່ອນໆທີ່ຂ້າພະເຈົ້າໄດ້ອອກໄປ. ສິ່ງຕ່າງໆທີ່ເປັນຂອງຜູ້ຊາຍກໍໄດ້ຖືກເຮັດໃຫ້ບໍຣິສຸດ ເຖິງແມ່ນເປັນການເຮັດວຽກຕາມປົກກະຕິແລ້ວ
ຍິ່ງວັນນີ້ພວກເຂົາກໍຍິ່ງບໍຣິສຸດກວ່າເກົ່າ."[6]ດັ່ງນັ້ນ ປະໂລຫິດຈຶ່ງໄດ້ມອບເຂົ້າຈີ່ບໍຣິສຸດໃຫ້ແກ່ລາວ.
ເພາະວ່າທີ່ນັ້ນບໍ່ມີເຂົ້າອື່ນອີກນອກຈາກເຂົ້າຈີ່ຕໍ່ຫນ້າພຣະພັກ, ຊຶ່ງໄດ້ເກັບມາຈາກຕໍ່ຫນ້າພຣະພັກຂອງພຣະຢາເວ,
ເພື່ອທີ່ຈະວາງເຂົ້າຈີ່ໃຫມ່ແທນທີ່ໃນວັນທີ່ເກັບເອົາເຂົ້າຈີ່ເກົ່ານັ້ນອອກໄປ.
[7]ບັດນີ້ຜູ້ຮັບໃຊ້ຄົນຫນຶ່ງຂອງໂຊນຢູ່ທີ່ນັ້ນໃນວັນນັ້ນ, ຖືກກັກຕົວໃຫ້ຢູ່ຕໍ່ຫນ້າພຣະຢາເວ. ລາວຊື່ວ່າໂດເອກຊາວເອໂດມ,
ຫົວຫນ້າຄົນລ້ຽງສັດຂອງໂຊນ.
[8]ດາວິດໄດ້ເວົ້າກັບອາຫິເມເລັກວ່າ, "ບັດນີ້ ທີ່ນີ້ບໍ່ມີຫອກຫລືດາບໃນມືຢູ່ຈັກດວງຫນຶ່ງຫລື? ເພາະວ່າ
ຂ້າພະເຈົ້າບໍ່ໄດ້ນໍາດາບຫລືອາວຸດຕິດໂຕມາເລີຍ, ເພາະວ່າ ພາຣະກິດຂອງກະສັດນັ້ນເລັ່ງດ່ວນຫລາຍ."[9]ປະໂລຫິດຄົນນັ້ນຈຶ່ງໄດ້ກ່າວວ່າ,
"ດາບຂອງໂກລີອາດຄົນຟີລິສະຕິນ, ຊຶ່ງທ່ານໄດ້ຂ້າທີ່ຮ່ອມພູເອລານັ້ນ, ຍັງຖືກຜ້າຫໍ່ຢູ່ຂ້າງຫລັງເສື້ອເອໂຟດ. ຖ້າທ່ານຕ້ອງການດາບດວງນັ້ນ,
ຈົ່ງເອົາໄປເຖີດ, ເພາະວ່າບໍ່ມີອາວຸດອື່ນໃດຢູ່ທີ່ນີ້ອີກແລ້ວ. "ດາວິດໄດ້ເວົ້າວ່າ, "ບໍ່ມີດາບດວງອື່ນອີກເຫມືອນດາບດວງນັ້ນແລ້ວ;
ເອົາໃຫ້ຂ້າພະເຈົ້າເຖີດ."
[10]ດາວິດກໍໄດ້ລຸກຂຶ້ນແລະໄດ້ຫນີຈາກໂຊນໄປຫາອາກີດ, ກະສັດຂອງເມືອງກາດ.[11]ພວກຜູ້ຮັບໃຊ້ຂອງອາກີດໄດ້ກ່າວກັບລາວວ່າ,
"ດາວິດຄົນນີ້ບໍ່ແມ່ນຫລືທີ່ເປັນກະສັດຂອງແຜ່ນດິນນັ້ນ? ພວກເຂົາບໍ່ໄດ້ຮ້ອງເພງໃຫ້ກັນແລະກັນກ່ຽວກັບລາວໃນການເຕັ້ນລໍາຫລືທີ່ວ່າ,
'ໂຊນໄດ້ຂ້າຄົນເປັນພັນໆຄົນ, ແລະດາວິດໄດ້ຂ້າຄົນເປັນຫມື່ນໆຄົນ?'"
[12]ດາວິດກໍໄດ້ເກັບຖ້ອຍຄໍາເຫລົ່ານີ້ໄວ້ໃນໃຈ ແລະ ຢ້ານອາກີດ, ກະສັດແຫ່ງເມືອງກາດຫລາຍ.
[13]ລາວຈຶ່ງໄດ້ປ່ຽນປະຕິກິລິຍາຂອງລາວຕໍ່ຫນ້າພວກເຂົາ ແລະໄດ້ເຮັດເປັນຄືຄົນບ້າໃນຫມູ່ພວກເຂົາ;
ລາວໄດ້ເຮັດເຄື່ອງຫມາຍໄວ້ທີ່ປະຕູຕ່າງໆຂອງປະຕູຂອງເມືອງ ແລະປ່ອຍໃຫ້ນໍ້າລາຍໄຫລລົງຕາມຫນວດເຄົາຂອງລາວ.
[14]ແລ້ວອາກີດຈຶ່ງໄດ້ເວົ້າກັບພວກຜູ້ຮັບໃຊ້ຂອງພະອົງວ່າ, "ເບິ່ງແມ໋, ພວກເຈົ້າເບິ່ງຊາຍຄົນທີ່ເປັນບ້າ.
ແລ້ວພວກເຈົ້າພາລາວມາຫາເຮົາເຮັດຫຍັງ?[15]ເຮົາຂາດຄົນບ້າຫລື, ເຈົ້າຈຶ່ງໄດ້ພາຄົນນີ້ມາເຮັດກິລິຍາແບບນີ້ຕໍ່ຫນ້າເຮົາ?
ຄົນຢ່າງນີ້ຄວນເຂົ້າມາໃນວັງຂອງເຮົາຫລື?"


generated on Tue Jun 17 19:01:42 2025

22 [1]ດັ່ງນັ້ນ ດາວິດກໍໄດ້ໄປຈາກທີ່ນັ້ນ ແລະໄດ້ຫນີໄປຢູ່ທີ່ຖ້ຳອາດຸນລຳ.
ເມື່ອພວກອ້າຍໆແລະເຊື້ອສາຍທັງຫລາຍຂອງບິດາຂອງລາວໄດ້ຍິນເລື່ອງນີ້, ພວກເຂົາກໍໄດ້ລົງໄປຫາລາວທີ່ນັ້ນ.
[2]ທຸກຄົນທີ່ຢູ່ໃນຄວາມທຸກຍາກ, ທຸກຄົນທີ່ມີຫນີ້ສິນ, ແລະທຸກຄົນທີ່ບໍ່ພໍໃຈກໍໄດ້ລວມກັນມາຫາລາວ—ພວກເຂົາໄດ້ມາເຕົ້າໂຮມກັນມາຫາລາວ.
ດາວິດກໍເປັນຫົວຫນ້າພວກເຂົາ. ມີຄົນມາຢູ່ກັບລາວປະມານສີ່ຮ້ອຍຄົນ.

[3]ແລ້ວດາວິດກໍໄດ້ອອກຈາກທີ່ນັ້ນໄປຍັງເມືອງມີຊະປາໃນໂມອາບ. ລາວໄດ້ບອກກະສັດແຫ່ງໂມອາບວ່າ,
"ຂໍໂຜດໃຫ້ບິດາມານດາຂອງຂ້ານ້ອຍໄປຢູ່ກັບພະອົງເຖີດ ຈົນກວ່າຂ້ານ້ອຍຈະຮູ້ວ່າ
ພຣະເຈົ້າຈະຊົງກະທຳປະການໃດເພື່ອຂ້ານ້ອຍ."[4]ລາວກໍໄດ້ປະພວກເຂົາໄວ້ກັບກະສັດແຫ່ງໂມອາບ.
ບິດາແລະມານດາຂອງລາວກໍໄດ້ອາສັຍຢູ່ກັບພະອົງຕະຫລອດເວລາທີ່ດາວິດຢູ່ໃນທີ່ກຳບັງເຂັ້ມແຂງຂອງລາວ.
[5]ແລ້ວຜູ້ປະກາດພຣະທັມຊື່ກາດໄດ້ເວົ້າກັບດາວິດວ່າ, "ຢ່າຢູ່ໃນທີ່ກຳບັງເຂັ້ມແຂງຂອງທ່ານ.
ຈົ່ງຈາກໄປເສຍແລະເຂົ້າໄປໃນແຜ່ນດິນຢູດາເຖີດ." ດັ່ງນັ້ນ ດາວິດກໍໄດ້ຈາກທີ່ນັ້ນແລະໄດ້ໄປຢູ່ໃນປ່າເຮເຣັດ.
[6]ໂຊນໄດ້ຮູ້ວ່າໄດ້ມີຜູ້ພົບເຫັນດາວິດ, ຄົນເຫລົ່ານັ້ນທີ່ໄດ້ຢູ່ກັບລາວ. ບັດນີ້ ໂຊນໄດ້ຢູ່ທີ່ເມືອງກິເບດກ້ອງຕົ້ນສົນຫມອກໃນເມືອງຣາມາ,
ພ້ອມດ້ວຍຫອກຂອງພະອົງ, ແລະພວກຜູ້ຮັບໃຊ້ທັງຫມົດຂອງພະອົງກໍໄດ້ຢືນຢູ່ອ້ອມຮອບພະອົງ.
[7]ໂຊນໄດ້ກ່າວກັບພວກຜູ້ຮັບໃຊ້ທີ່ຢືນຢູ່ຮອບພະອົງວ່າ, "ບັດນີ້ຈົ່ງຟັງໃຫ້ດີ, ປະຊາຊົນແຫ່ງເບັນຢາມິນ!
ລູກຊາຍຂອງເຢຊີຈະໃຫ້ທົ່ງນາທັງຫລາຍ ແລະສວນອະງຸ່ນທັງຫລາຍແກ່ພວກເຈົ້າຫລື? ລາວຈະຕັ້ງພວກເຈົ້າໃຫ້ເປັນຜູ້ບັງຄັບບັນຊາກອງພັນ
ແລະຜູ້ບັງຄັບບັນຊາກອງຮ້ອຍຫລື,[8]ເພື່ອເປັນການແລກປ່ຽນສຳລັບທີ່ພວກເຈົ້າທັງຫມົດຄິດກະບົດຕໍ່ເຮົາຫລື? ບໍ່ມີໃຜຈັກຄົນແຈ້ງແກ່ເຮົາເລີຍ
ເມື່ອລູກຊາຍຂອງເຮົາເຮັດພັນທະສັນຍາກັບລູກຊາຍຂອງເຢຊີ. ບໍ່ມີໃຜໃນພວກເຈົ້າກຳລັງເສຍໃຈກັບເຮົາ.
ບໍ່ມີໃຜຈັກຄົນໃນພວກເຈົ້າແຈ້ງແກ່ເຮົາວ່າ ລູກຊາຍຂອງເຮົາ ໄດ້ປຸກປັ່ນດາວິດຜູ້ຮັບໃຊ້ຂອງເຮົາໃຫ້ຕໍ່ສູ້ກັບເຮົາ.
ໃນວັນນີ້ລາວກໍຫລົບລີ້ແລະຄອຍຖ້າເຮົາ ເພື່ອລາວຈະໄດ້ໂຈມຕີເຮົາ."
[9]ແລ້ວໂດເອກ ຄົນເອໂດມ ຜູ້ທີ່ເປັນຫົວຫນ້າພວກຜູ້ຮັບໃຊ້ຂອງໂຊນຈຶ່ງໄດ້ຕອບວ່າ, "ຂ້ານ້ອຍໄດ້ເຫັນລູກຊາຍຂອງເຢຊີມາທີ່ເມືອງໂນບ,
ມາຫາອາຫິເມເລັກລູກຊາຍຂອງອາຫິທູບ.[10]ລາວກໍໄດ້ອະທິຖານຕໍ່ພຣະຢາເວຂໍໃຫ້ຊົງຊ່ວຍລາວ, ແລະລາວໄດ້ໃຫ້ສະບຽງອາຫານແກ່ລາວ
ແລະໃຫ້ດາບຂອງໂກລີອາດຄົນຟີລິສະຕິນແກ່ລາວໄປ."
[11]ແລ້ວກະສັດກໍໄດ້ສົ່ງຄົນໄປເອີ້ນເອົາອາຫິເມເລັກປະໂລຫິດ ລູກຊາຍຂອງອາຫິທູບ ແລະເຊື້ອສາຍບິດາຂອງທ່ານທັງຫມົດ,
ທີ່ເປັນພວກປະໂລຫິດທີ່ໄດ້ຢູ່ໃນເມືອງໂນບ. ພວກເຂົາທຸກຄົນກໍໄດ້ມາຫາກະສັດ.[12]ໂຊນໄດ້ກ່າວວ່າ, "ບັດນີ້ຈົ່ງຟັງ, ລູກຊາຍຂອງອາຫິທູບ."
ລາວໄດ້ຕອບວ່າ,"ຂ້ານ້ອຍຢູ່ທີ່ນີ້ແລ້ວ, ເຈົ້ານາຍຂອງຂ້ານ້ອຍ."[13]ໂຊນໄດ້ກ່າວກັບລາວວ່າ, "ເປັນຫຍັງພວກເຈົ້າຈຶ່ງຮ່ວມກັນກະບົດຕໍ່ເຮົາ,
ທັງພວກເຈົ້າແລະລູກຊາຍຂອງເຢຊີ, ໃນການທີ່ເຈົ້າໄດ້ໃຫ້ເຂົ້າຈີ່ແລະດາບແກ່ລາວ, ແລະໄດ້ຖາມພຣະເຈົ້າໃຫ້ລາວ
ເພື່ອທີ່ພຣະອົງຈະຊົງຊ່ວຍລາວ, ດັ່ງນັ້ນລາວຈຶ່ງໄດ້ລຸກຂຶ້ນຕໍ່ສູ້ກັບເຮົາ, ແລະໄດ້ຄອຍຖ້າຊຸ່ມດັກເຮົາຢູ່, ເຫມືອນຢ່າງທຸກວັນນີ້?"
[14]ແລ້ວອາຫິເມເລັກໄດ້ຕອບກະສັດແລະໄດ້ກ່າວວ່າ, "ໃນບັນດາຂ້າຣາຊະການຂອງພະອົງທັງຫມົດ ມີໃຜແດ່ທີ່ຈະຊື່ສັດຢ່າງດາວິດ,
ຜູ້ທີ່ເປັນລູກເຂີຍຂອງກະສັດ ແລະເປັນຜູ້ບັງຄັບບັນຊາທະຫານຮັກສາຂອງພະອົງ, ແລະເປັນຜູ້ມີກຽດໃນຣາຊະວັງຂອງພະອົງຫລື?[15]ວັນນີ້
ເປັນຄັ້ງທຳອິດທີ່ຂ້ານ້ອຍໄດ້ຂໍຕໍ່ພຣະເຈົ້າໃຫ້ຊ່ວຍລາວຈຶ່ງຫລື? ຂ້ານ້ອຍບໍ່ເປັນແບບນັ້ນແນ່ນອນ!
ຂໍຢ່າໃຫ້ກະສັດໄດ້ກ່າວໂທດຢ່າງຫນຶ່ງຢ່າງໃດຕໍ່ຜູ້ຮັບໃຊ້ຂອງພະອົງ ຫລືຕໍ່ເຊື້ອສາຍທັງປວງຂອງບິດາຂອງຂ້ານ້ອຍເລີຍ.
ເພາະຜູ້ຮັບໃຊ້ຂອງພະອົງບໍ່ຮູ້ເລື່ອງທັງຫມົດນີ້ເລີຍ."
[16]ກະສັດໄດ້ຕອບວ່າ, "ອາຫິເມເລັກເອີຍ, ເຈົ້າຈະຕ້ອງຕາຍຢ່າງແນ່ນອນ,
ທັງເຈົ້າເອງແລະເຊື້ອສາຍທັງປວງຂອງບິດາຂອງເຈົ້າດ້ວຍ."[17]ກະສັດກໍໄດ້ສັ່ງໃຫ້ທະຫານຮັກສາພະອົງຜູ້ທີ່ຢືນຢູ່ໃກ້ໆທີ່ນັ້ນວ່າ,
"ຈົ່ງຫັນມາແລະຂ້າພວກປະໂລຫິດຂອງພຣະຢາເວສາ. ເພາະວ່າມືຂອງພວກເຂົາຢູ່ກັບດາວິດ, ແລະເພາະວ່າພວກເຂົາໄດ້ຮູ້ວ່າລາວຫນີໄປ,
ແຕ່ບໍ່ໄດ້ແຈ້ງໃຫ້ເຮົາຮູ້." ແຕ່ພວກຜູ້ຮັບໃຊ້ຂອງກະສັດບໍ່ໄດ້ລົງມືຂ້າພວກປະໂລຫິດຂອງພຣະຢາເວ.
[18]ແລ້ວກະສັດຈຶ່ງໄດ້ກ່າວກັບໂດເອກວ່າ, "ເຈົ້າຈົ່ງຫັນໄປຂ້າປະໂລຫິດເຫລົ່ານັ້ນ." ດັ່ງນັ້ນ ໂດເອກຊາວເອໂດມກໍໄດ້ຫັນໄປ
ແລະໄດ້ຂ້າຟັນບັນດາປະໂລຫິດ; ລາວໄດ້ຂ້າບຸກຄົນທີ່ສວມເສື້ອຜ້າປ່ານເອໂຟດແປດສິບຫ້າຄົນໃນວັນນັ້ນ.[19]ດ້ວຍຄົມດາບ,
ລາວໄດ້ປຣະຫານຊາວເມືອງໂນບ, ເມືອງຂອງພວກປະໂລຫິດ, ຂ້າທັງຜູ້ຊາຍແລະຜູ້ຍິງ, ເດັກນ້ອຍແລະເດັກແດງ, ແລະບັນດາງົວແລະໂຕລວາ
ແລະບັນດາແກະທັງຫລາຍ. ລາວໄດ້ຂ້າພວກເຂົາທັງຫມົດດ້ວຍຄົມດາບ.
[20]ແຕ່ລູກຊາຍຄົນຫນຶ່ງຂອງອາຫິເມເລັກລູກຊາຍຂອງອາຫິທູບ, ຊື່ວ່າອາບີຢາທາ, ໄດ້ຫນີພົ້ນ ແລະໄດ້ຫນີຕາມດາວິດໄປ.
[21]ບາບີຢາທາກໍໄດ້ບອກດາວິດວ່າ ໂຊນໄດ້ປຣະຫານພວກປະໂລຫິດທັງຫລາຍຂອງພຣະຢາເວແລ້ວ.
[22]ດາວິດຈຶ່ງໄດ້ເວົ້າກັບອາບີຢາທາວ່າ, "ຂ້ອຍໄດ້ຮູ້ໃນວັນນັ້ນແລ້ວ, ເມື່ອໂດເອກຊາວເອໂດມກໍໄດ້ຢູ່ທີ່ນັ້ນ,
ວ່າລາວຈະຕ້ອງບອກໂຊນຢ່າງແນ່ນອນ. ຂ້ອຍເອງກໍຕ້ອງຮັບຜິດຊອບສຳລັບຄວາມຕາຍຂອງທຸກຄົນໃນເຊື້ອສາຍຂອງບິດາຂອງເຈົ້າ.
[23]ຈົ່ງຢູ່ກັບຂ້ອຍເຖີດ ແລະຢ່າຢ້ານເລີຍ. ເພາະວ່າຜູ້ທີ່ສະແຫວງຫາຊີວິດຂອງເຈົ້າ ກໍສະແຫວງຫາຊີວິດຂອງຂ້ອຍຄືກັນດ້ວຍ.
ເຈົ້າຈະປອດພັຍເມື່ອຢູ່ກັບຂ້ອຍ.

 generated on Tue Jun 17 19:01:42 2025

23 [1]ພວກເຂົາບອກດາວິດວ່າ,"ເບິ່ງແມ໋, ຄົນຟີລິສະຕິນກຳລັງສູ້ຮົບກັບເມືອງເຄອີລາ ແລະກຳລັງປຸ້ນລານນວດເຂົ້າ."[2]ດັ່ງນັ້ນ
ດາວິດຈຶ່ງໄດ້ກ່າວຕໍ່ພຣະຢາເວ ເພື່ອຂໍຄວາມຊ່ວຍເຫລືອແລະໄດ້ທູນຖາມວ່າ, "ຄວນທີ່ຂ້ານ້ອຍຈະໄປຕໍ່ສູ້ກັບຄົນຟີລິສະຕິນເຫລົ່ານີ້ຫລືບໍ່?
ພຣະຢາເວໄດ້ກ່າວກັບດາວິດວ່າ, "ຈົ່ງໄປເຖີດ ແລະຕໍ່ສູ້ກັບຄົນຟີລິສະຕິນ ແລະຈົ່ງຊ່ວຍກູ້ເມືອງເຄອີລາໄວ້."

[3]ພັກພວກຂອງດາວິດກ່າວກັບລາວວ່າ, "ເບິ່ງແມ໋, ພວກເຮົາຢ້ານກົວຢູ່ທີ່ນີ້ໃນຢູດາ. ພວກເຮົາຈະຢ້ານກົວຫລາຍຂະໜາດໃດ
ຖ້າພວກເຮົາຂຶ້ນໄປຍັງເຄອີລາ ເພື່ອສູ້ຮົບກັບເຫລົ່າກອງທັບຂອງຄົນຟີລິສະຕິນ?"[4]ແລ້ວດາວິດກໍໄດ້ອະທິຖານຕໍ່ພຣະຢາເວອີກຄັ້ງຫນຶ່ງ
ເພື່ອຂໍຄວາມຊ່ວຍເຫລືອ. ພຣະຢາເວໄດ້ຕອບລາວວ່າ, "ຈົ່ງລຸກຂຶ້ນ, ລົງໄປຍັງເຄອີລາ. ເພາະເຮົາຈະມອບຄົນຟີລິສະຕິນໄວ້ໃນມືຂອງເຈົ້າ."
[5]ດາວິດກັບພັກພວກຂອງລາວກໍໄດ້ໄປຍັງເຄອີລາຕໍ່ສູ້ກັບຄົນຟີລິສະຕິນ. ລາວໄດ້ນຳເອົາຝູງສັດຂອງພວກເຂົາໄປ
ແລະໄດ້ໂຈມຕີພວກເຂົາດ້ວຍການຂ້າຢ່າງຫລວງຫລາຍ. ດັ່ງນັ້ນດາວິດກໍໄດ້ຊ່ວຍກູ້ຊາວເມືອງເຄອີລາໄວ້.
[6]ເມື່ອອາບີຢາທາລູກຊາຍຂອງອາຫີເມເລັກໄດ້ຫນີໄປຫາດາວິດທີ່ເມືອງເຄອີລານັ້ນ, ລາວໄດ້ຖືເສື້ອເອໂຟດໄປນຳ.
[7]ມີຄົນໄດ້ໄປບອກໂຊນວ່າດາວິດໄດ້ໄປທີ່ເຄອີລາແລ້ວ. ໂຊນຈຶ່ງໄດ້ກ່າວວ່າ, "ພຣະເຈົ້າໄດ້ມອບເຂົາໄວ້ໃນມືຂອງເຮົາແລ້ວ.
ເພາະເຂົາໄດ້ຂັງຕົວເອງ ເມື່ອເຂົາເຂົ້າໄປໃນເມືອງທີ່ມີປະຕູຫລາຍບານ ແລະລູກກົງຫລາຍອັນ.[8]ໂຊນໄດ້ເອີ້ນທະຫານທັງຫມົດໃຫ້ເຂົ້າສູ່ສົງຄາມ,
ໃຫ້ລົງໄປຍັງເຄອີລາ, ເພື່ອປິດລ້ອມດາວິດກັບພັກພວກຂອງລາວ.[9]ດາວິດໄດ້ຮູ້ວ່າໂຊນວາງແຜນທຳຮ້າຍລາວ.
ລາວຈຶ່ງໄດ້ເວົ້າກັບອາບີຢາທາປະໂລຫິດວ່າ, "ຈົ່ງນຳເສື້ອເອໂຟດມາທີ່ນີ້ເຖີດ."
[10]ແລ້ວດາວິດໄດ້ກ່າວວ່າ, "ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ຜູ້ຮັບໃຊ້ຂອງພຣະອົງໄດ້ຍິນແນ່ນອນວ່າໂຊນຫາຊ່ອງທາງທີ່ຈະມາຍັງເຄອີລາ, ເພື່ອທຳລາຍເມືອງນີ້ ເພາະຂ້ານ້ອຍເປັນເຫດ.
[11]ຊາວເຄອີລາຈະມອບຂ້ານ້ອຍໄວ້ໃນມືຂອງໂຊນຫລື? ໂຊນຈະລົງມາດັ່ງທີ່ຜູ້ຮັບໃຊ້ຂອງພຣະອົງໄດ້ຍິນມານັ້ນຢ່າງນັ້ນຫລື? ຂ້າແດ່ພຣະຢາເວ,
ພຣະເຈົ້າແຫ່ງອິສະຣາເອນ, ຂໍພຣະອົງໄດ້ບອກຜູ້ຮັບໃຊ້ຂອງພຣະອົງເຖີດ." ພຣະຢາເວໄດ້ກ່າວວ່າ, "ເຂົາຈະລົງມາ."
[12]ແລ້ວດາວິດໄດ້ກ່າວວ່າ, "ຊາວເຄອີລາຈະມອບຂ້ານ້ອຍ ແລະພັກພວກຂອງຂ້ານ້ອຍໄວ້ໃນມືຂອງໂຊນຫລື?" ພຣະຢາເວໄດ້ກ່າວວ່າ,
"ພວກເຂົາຈະມອບເຈົ້າ."
[13]ແລ້ວດາວິດແລະພັກພວກຂອງລາວ, ຊຶ່ງມີປະມານຫົກຮ້ອຍຄົນ, ກໍໄດ້ລຸກຂຶ້ນ ແລະໄດ້ໄປຈາກເຄອີລາ,
ແລະພວກເຂົາກໍໄດ້ໄປຈາກບ່ອນຫນຶ່ງໄປຍັງອີກບ່ອນຫນຶ່ງ. ມີຄົນໄປບອກໂຊນວ່າ ດາວິດໄດ້ໄປຈາກເຄອີລາແລ້ວ,
ແລະພະອົງກໍໄດ້ເລີກການຕິດຕາມ.[14]ດາວິດກໍໄດ້ຢູ່ຕາມທີ່ກຳບັງເຂັ້ມແຂງໃນຖິ່ນແຫ້ງແລ້ງກັນດານ,
ໃນເຂດແດນເນີນພູແຫ່ງຖິ່ນແຫ້ງແລ້ງກັນດານຂອງຊິບ. ໂຊນກໍໄດ້ຕາມລ່າຊີວິດຂອງລາວທຸກວັນ,
ແຕ່ພຣະເຈົ້າບໍ່ໄດ້ມອບລາວໄວ້ໃນມືຂອງໂຊນ.
[15]ດາວິດໄດ້ເຫັນວ່າໂຊນໄດ້ອອກມາ ເພື່ອສະແຫວງຫາຊີວິດຂອງລາວ; ບັດນີ້ ດາວິດກໍຢູ່ໃນຖິ່ນແຫ້ງແລ້ງກັນດານແຫ່ງຊິບທີ່ໂຮເຣັດ.
[16]ແລ້ວໂຢນາທານ, ລູກຊາຍຂອງໂຊນ, ກໍໄດ້ລຸກຂຶ້ນ ແລະໄດ້ໄປຫາດາວິດທີ່ໂຮເຣັດ, ແລະໄດ້ເສີມກຳລັງຂອງລາວໃຫ້ເຂັ້ມແຂງຂຶ້ນໃນພຣະເຈົ້າ.
[17]ໂຢນາທານໄດ້ເວົ້າກັບລາວວ່າ, "ຢ່າຢ້ານເລີຍ. ເພາະວ່າພະຫັດຂອງໂຊນພໍ່ຂອງຂ້ອຍຈະຫາເຈົ້າບໍ່ພົບ.
ເຈົ້າຈະໄດ້ເປັນກະສັດເຫນືອອິສະຣາເອນ, ແລະຂ້ອຍຈະເປັນທີ່ສອງຮອງຈາກເຈົ້າ.
ໂຊນພໍ່ຂອງຂ້ອຍກໍຮູ້ເລື່ອງນີ້ດ້ວຍ."[18]ພວກເຂົາກໍໄດ້ເຮັດພັນທະສັນຍາຕໍ່ຫນ້າພຣະຢາເວ. ດາວິດກໍຍັງຢູ່ທີ່ໂຮເຣັດ,
ແລະໂຢນາທານກໍໄດ້ກັບໄປທີ່ພະຣາຊະວັງ.
[19]ຊາວຊິບໄດ້ຂຶ້ນໄປຫາໂຊນທີ່ກີເບອາ ແລະກ່າວວ່າ, "ດາວິດໄດ້ຫລົບລີ້ຢູ່ທ່າມກາງພວກຂ້ານ້ອຍ ໃນທີ່ກຳບັງເຂັ້ມແຂງທີ່ໂຮເຣັດ,
ເທິງເນີນພູເຂົາຮາຄີລາ, ຊຶ່ງຢູ່ໃຕ້ເຢຊີໂມນບໍ່ແມ່ນຫລື?[20]ບັດນີ້ ຂໍໂຜດລົງມາເຖີດ, ຂ້າແດ່ກະສັດ! ສຸດແລ້ວແຕ່ພະອົງຈະຊົງປະສົງ,
ຂໍລົງມາເຖີດ! ສ່ວນພວກຂ້ານ້ອຍຈະມອບລາວໄວ້ໃນມືຂອງກະສັດ."
[21]ໂຊນໄດ້ກ່າວວ່າ, "ຂໍພຣະຢາເວຊົງອວຍພອນແກ່ພວກທ່ານ. ເພາະພວກທ່ານໄດ້ມີຄວາມຮັກຕໍ່ເຮົາ.[22]ຈົ່ງໄປ, ເບິ່ງໃຫ້ແນ່ໃຈຍິ່ງຂຶ້ນ. ໃຫ້ຮູ້ ແລະ
ຫາເບິ່ງວ່າ ສະຖານທີ່ທີ່ລາວລີ້ນັ້ນຢູ່ທີ່ໃດ ແລະໃຜໄດ້ເຫັນລາວທີ່ນັ້ນແດ່. ມີຄົນໄດ້ບອກເຮົາວ່າ ລາວເປັນຄົນເຈົ້າເລ່ແທ້ໆ.[23]ດັ່ງນັ້ນ ຈົ່ງເບິ່ງ,
ແລະໃຫ້ຮູ້ທີ່ຊຸ່ມທັງຫມົດທີ່ລາວໄດ້ລີ້ຢູ່. ຈົ່ງກັບມາຫາເຮົາດ້ວຍຂ່າວສານທີ່ແນ່ນອນ, ແລ້ວເຮົາຈະໄປກັບພວກເຈົ້າ. ຖ້າລາວຢູ່ໃນເຂດແດນນັ້ນ,
ເຮົາຈະຄົ້ນຫາລາວໃນທ່າມກາງພັນຄົນຂອງຕະກຸນຢູດາ."
[24]ແລ້ວພວກເຂົາກໍໄດ້ລຸກຂຶ້ນແລະໄດ້ໄປຍັງເມືອງຊິບກ່ອນຫນ້າໂຊນ. ບັດນີ້
ດາວິດກັບພັກພວກຂອງລາວຢູ່ໃນຖິ່ນແຫ້ງແລ້ງກັນດານມາໂອນໃນອາຣາບາຕອນໃຕ້ຂອງເຢຊີໂມນ.
[25]ໂຊນແລະເຫລົ່າທະຫານຂອງພະອົງກໍໄດ້ຄົ້ນຫາລາວ. ແຕ່ມີຄົນໄປບອກດາວິດ, ດັ່ງນັ້ນ ລາວຈຶ່ງໄດ້ລົງໄປຍັງເນີນພູເຂົາຫີນ
ແລະໄດ້ອາສັຍຢູ່ໃນຖິ່ນແຫ້ງແລ້ງກັນດານມາໂອນ. ເມື່ອໂຊນໄດ້ຍິນກໍໄດ້ຕິດຕາມດາວິດໄປໃນຖິ່ນແຫ້ງແລ້ງກັນດານມາໂອນ.
[26]ໂຊນໄດ້ໄປຟາກພູເຂົາອີກຂ້າງຫນຶ່ງ, ສ່ວນດາວິດ ແລະພັກພວກຂອງລາວກໍໄປຢູ່ພູເຂົາອີກຟາກຫນຶ່ງ. ດາວິດຟ້າວຫນີໄປຈາກໂຊນ.
ເພາະໂຊນແລະເຫລົ່າທະຫານຂອງພະອົງໄດ້ລ້ອມດາວິດ ແລະ ພັກພວກຂອງລາວ ເພື່ອຈະຈັບພວກລາວ.
[27]ຜູ້ສົ່ງຂ່າວຄົນຫນຶ່ງໄດ້ມາບອກໂຊນແລະໄດ້ກ່າວວ່າ, "ຂໍໃຫ້ຮີບກັບໄປ, ເພາະຄົນຟີລິສະຕິນໄດ້ມາຕໍ່ສູ້ແຜ່ນດິນ."
[28]ໂຊນຈຶ່ງໄດ້ກັບຈາກການໄລ່ລ່າດາວິດ ແລະ ໄດ້ໄປສູ້ຮົບກັບຄົນຟີລິສະຕິນ. ດັ່ງນັ້ນ ສະຖານທີ່ນັ້ນຈຶ່ງຖືກເອີ້ນວ່າ ສີລາພົ້ນພັຍ.
[29]ດາວິດກໍໄດ້ຂຶ້ນໄປຈາກທີ່ນັ້ນ ແລະໄດ້ອາສັຍໃນທີ່ກຳບັງເຂັ້ມແຂງແຫ່ງເອນເກດີ.


generated on Tue Jun 17 19:01:42 2025

24 1ເມື່ອໂຊນໄດ້ກັບຈາກການໄລ່ລ່າຄົນຟີລິສະຕິນແລ້ວ, ໄດ້ມີຄົນມາບອກລາວວ່າ,
"ດາວິດຢູ່ໃນຖິ່ນແຫ້ງແລ້ງກັນດານເອນເກດີ."2ແລ້ວໂຊນກໍໄດ້ນຳກຳລັງສາມພັນຄົນທີ່ຄັດເລືອກຈາກຄົນອິສະຣາເອນທັງປວງ
ແລະໄດ້ໄປຄົ້ນຫາດາວິດກັບພັກພວກຂອງລາວທີ່ເຫລົ່າຫີນລຽງຜາ.

3ພະອົງໄດ້ມາເຖິງຄອກແກະໃນລະຫວ່າງທາງ, ບ່ອນທີ່ມີຖ້ຳແຫ່ງຫນຶ່ງ. ໂຊນກໍໄດ້ເຂົ້າໄປໃນເພື່ອພັກຜ່ອນ. ບັດນີ້
ດາວິດກັບພັກພວກຂອງລາວກໍໄດ້ນັ່ງຢູ່ໃນສ່ວນທີ່ເລິກເຂົ້າໄປໃນຖ້ຳ.4ພັກພວກຂອງດາວິດກໍໄດ້ກ່າວກັບລາວວ່າ, "ເບິ່ງແມ໋
ວັນນີ້ເປັນວັນທີ່ພຣະຢາເວໄດ້ກ່າວກັບທ່ານວ່າ, "ເຮົາຈະມອບສັດຕຣູຂອງເຈົ້າໄວ້ໃນມືຂອງເຈົ້າ, ເພື່ອເຈົ້າຈະເຮັດກັບລາວຕາມທີ່ເຈົ້າປະສົງ."
ແລ້ວດາວິດກໍໄດ້ລຸກຂຶ້ນ ແລະ ໄດ້ຄານໄປຢ່າງງຽບໆ ແລະເຂົ້າໄປ ແລະໄດ້ຕັດສົ້ນເສື້ອຂອງໂຊນ.
5ຫລັງຈາກນັ້ນ ຈິດໃຈຂອງດາວິກໍໄດ້ຮູ້ສຶກຜິດ ເພາະວ່າ ລາວໄດ້ຕັດສົ້ນເສື້ອຂອງໂຊນ.6ລາວໄດ້ເວົ້າກັບພັກພວກຂອງລາວວ່າ,
"ຂໍພຣະຢາເວຫ້າມຂ້າພະເຈົ້າບໍ່ໃຫ້ເຮັດໃນສິ່ງນີ້ຕໍ່ເຈົ້ານາຍຂອງຂ້າພະເຈົ້າ, ຜູ້ທີ່ພຣະຢາເວເຈີມໄວ້, ຄືທີ່ຈະຢຽດມືອອກຕໍ່ສູ້ກັບພະອົງ, ເບິ່ງແມ໋
ພະອົງເປັນຜູ້ທີ່ພຣະຢາເວຊົງເຈີມໄວ້."7ດັ່ງນັ້ນ ດາວິດໄດ້ຕຳຫນິຄົນຂອງລາວ ດ້ວຍຖ້ອຍຄຳເຫລົ່ານີ້, ແລະບໍ່ຍອມໃຫ້ພວກເຂົາທຳຮ້າຍໂຊນ.
ໂຊນກໍໄດ້ລຸກຂຶ້ນ, ໄດ້ອອກຈາກຖ້ຳ, ແລະໄປຕາມທາງຂອງພະອົງ.
8ຫລັງຈາກນັ້ນ, ດາວິດໄດ້ລຸກຂຶ້ນດ້ວຍ, ໄດ້ອອກໄປຈາກຖ້ຳ, ແລະຮ້ອງຫາໂຊນວ່າ: "ຂ້າແດ່ກະສັດ ເຈົ້ານາຍຂອງຂ້ານ້ອຍ."
ເມື່ອໂຊນໄດ້ຫລຽວເບິ່ງດ້ານຫລັງ, ດາວິດກໍໄດ້ໂນ້ມໂຕກົ້ມລົງເຖິງດິນ ແລະ ໄດ້ສະແດງຄວາມເຄົາຣົບຕໍ່ໂຊນ.9ດາວິດໄດ້ເວົ້າກັບໂຊນວ່າ,
"ເປັນຫຍັງພະອົງຟັງຖ້ອຍຄຳຂອງຄົນທີ່ກ່າວວ່າ, 'ເບິ່ງແມ໋, ດາວິດສະແຫວງຫາທາງທີ່ຈະທຳຮ້າຍພະອົງ?'
10ໃນວັນນີ້ ຕໍ່ສາຍຕາຂອງພະອົງໄດ້ປະຈັກແລ້ວວ່າ ພຣະຢາເວ ສົ່ງພະອົງໄວໃນມືຂອງຂ້ານ້ອຍແລ້ວ ເມື່ອພວກເຮົາຢູ່ໃນຖ້ຳ.
ບາງຄົນຂໍໃຫ້ຂ້ານ້ອຍປຣະຫານພະອົງເສຍ, ແຕ່ຂ້ານ້ອຍກໍໄດ້ໄວ້ຊີວິດຂອງພະອົງ. ຂ້ານ້ອຍກ່າວວ່າ,
'ເຮົາຈະບໍ່ຢຽດມືອອກທຳຮ້າຍເຈົ້ານາຍຂອງເຮົາ; ເພາະພະອົງເປັນຜູ້ທີ່ພຣະຢາເວຊົງເຈີມໄວ້.'11ເບິ່ງແມ໋, ບິດາຂອງຂ້ານ້ອຍ,
ເບິ່ງສົ້ນເສື້ອຂອງພະອົງຢູ່ໃນມືຂອງຂ້ານ້ອຍແລ້ວ. ເພາະວ່າ ຂ້ານ້ອຍໄດ້ຕັດສົ້ນເສື້ອຂອງພະອົງອອກ ແລະບໍ່ໄດ້ປຣະຫານພະອົງເສຍ,
ຂໍພະອົງຊົງຮູ້ເຖີດ ແລະເບິ່ງເຖີດວ່າ ໃນມືຂອງຂ້ານ້ອຍບໍ່ມີຄວາມຜິດຫລືກະບົດ, ແລະຂ້ານ້ອຍບໍ່ໄດ້ເຮັດບາບຕໍ່ສູ້ພະອົງ,
ເຖິງແມ່ນວ່າພະອົງກຳລັງຕາມລ່າຊີວິດຂອງຂ້ານ້ອຍ ເພື່ອທຳລາຍຂ້ານ້ອຍເສຍກໍຕາມ.
12ຂໍພຣະຢາເວຊົງພິຈາຣະນາຕັດສິນລະຫວ່າງຂ້ານ້ອຍກັບພະອົງ, ແລະຂໍໃຫ້ພຣະຢາເວຊົງແກ້ແຄ້ນແທນຂ້ານ້ອຍທີ່ຕໍ່ສູ້ພະອົງ,
ແຕ່ມືຂອງຂ້ານ້ອຍບໍ່ຄວນເຮັດສິ່ງໃດຕໍ່ສູ້ພະອົງ.13ດັ່ງສຸພາສິດໂບຮານທີ່ວ່າ, "ຄວາມອະທັມກໍອອກມາຈາກຄົນອະທັມ.'
ແຕ່ມືຂອງຂ້ານ້ອຍຈະບໍ່ເຮັດສິ່ງໃດຕໍ່ສູ້ພະອົງເລີຍ.
14ກະສັດແຫ່ງອິສະຣາເອນອອກມາຕາມຫາໃຜ? ພະອົງຊົງໄລ່ຕາມຈັບຜູ້ໃດ? ຊົງໄລ່ຕິດຕາມຫມາຕາຍຫລື! ຊົງໄລ່ຕາມໂຕມັດໂຕຫນຶ່ງຫລື!
15ຂໍພຣະຢາເວຊົງເປັນຜູ້ພິພາກສາ ແລະຊົງພິຈາຣະນາຕັດສິນລະຫວ່າງຂ້ານ້ອຍກັບພະອົງ, ແລະຂໍພຣະອົງໂຜດເບິ່ງ,
ຂໍຊົງເວົ້າຄະດີຄວາມຝ່າຍຂ້ານ້ອຍ ແລະຂໍຊ່ວຍກູ້ຂ້ານ້ອຍໃຫ້ພົ້ນຈາກມືຂອງພະອົງດ້ວຍ."
16ເມື່ອດາວິດໄດ້ເວົ້າຖ້ອຍຄຳເຫລົ່ານີ້ຕໍ່ໂຊນຈົບແລ້ວ, ໂຊນໄດ້ເວົ້າວ່າ, "ນັ້ນເປັນສຽງຂອງເຈົ້າຫລື, ດາວິດລູກຊາຍຂອງພໍ່?"
ໂຊນກໍໄດ້ສົ່ງສຽງແລະຮ້ອງໄຫ້.
17ພະອົງໄດ້ກ່າວກັບດາວິດວ່າ, "ເຈົ້າຊອບທັມຍິ່ງກ່າວເຮົາ. ເພາະເຈົ້າຕອບແທນເຮົາດ້ວຍຄວາມດີ,
ໃນເມື່ອເຮົາຕອບແທນເຈົ້າດ້ວຍຄວາມຮ້າຍກາດ.18ເຈົ້າໄດ້ສະແດງໃຫ້ເຮົາເຫັນໃນວັນນີ້ແລ້ວວ່າ ເຈົ້າເຮັດຄວາມດີຕໍ່ເຮົາຢ່າງໃດ,
ໃນການທີ່ເຈົ້າບໍ່ໄດ້ປຣະຫານຊີວິດຂອງເຮົາເສຍ ເມື່ອພຣະຢາເວໄດ້ຊົງມອບເຮົາໄວ້ໃນຄວາມເມດຕາຂອງເຈົ້າ.
19ເພາະວ່າຖ້າຊາຍຄົນໃດພົບສັດຕຣູຂອງຕົນ, ລາວຈະປ່ອຍເຂົາໄປຢ່າງປອດພັຍຫລື?
ຂໍພຣະຢາເວປຣະທານລາງວັນແກ່ເຈົ້າສຳລັບການດີທີ່ເຈົ້າໄດ້ເຮັດແກ່ເຮົາໃນວັນນີ້.20ບັດນີ້, ເຮົາຮູ້ແລ້ວວ່າ ເຈົ້າຈະເປັນກະສັດຢ່າງແນ່ນອນ
ແລະ ຣາຊະອານາຈັກອິສະຣາເອນຈະຕັ້ງຫມັ້ນຄົງຢູ່ໃນມືຂອງເຈົ້າ.
21ຈົ່ງປະຕິຍານຕໍ່ເຮົາໃນພຣະນາມຊື່ຂອງພຣະຢາເວວ່າ ເຈົ້າຈະບໍ່ຕັດເຊື້ອຍສາຍຂອງເຮົາ ເມື່ອເຮົາຕາຍໄປແລ້ວ,
ແລະຈະບໍ່ທຳລາຍຊື່ຂອງເຮົາຈາກເຊື້ອສາຍບິດາຂອງເຮົາ."22ດັ່ງນັ້ນ ດາວິດກໍໄດ້ປະຕິຍານຕໍ່ໂຊນ. ແລ້ວໂຊນກໍໄດ້ກັບໄປທີ່ພະຣາຊະວັງຂອງຕົນ,
ແຕ່ດາວິດກັບພັກພວກຂອງລາວກໍໄດ້ຂຶ້ນໄປທີ່ກຳບັງເຂັ້ມແຂງ.

 generated on Tue Jun 17 19:01:42 2025

25 1 ບັດນີ້ ຊາມູເອນໄດ້ສິ້ນຊີວິດແລ້ວ. ຄົນອິສະຣາເອນທັງຫມົດກໍໄດ້ເຕົ້າໂຮມກັນແລະໄດ້ໄວ້ທຸກໃຫ້ກັບລາວ,
ແລະພວກເຂົາໄດ້ຝັງສົບຂອງລາວໄວ້ທີ່ບ້ານຂອງລາວໃນຣາມາ. ແລ້ວດາວິດກໍໄດ້ລຸກຂຶ້ນໄປຍັງຖິ່ນແຫ້ງແລ້ງກັນດານປາຣານ.

2 ມີຊາຍຄົນຫນຶ່ງໃນມາໂອນ, ຜູ້ໄດ້ມີຊັບສົມບັດຫລາຍໃນຄາເມນ. ຊາຍຄົນນັ້ນເປັນຄົນຮັ່ງມີຫລາຍ. ລາວມີແກະສາມພັນໂຕແລະ
ແບ້ຫນຶ່ງພັນໂຕ. ລາວກໍາລັງຕັດຂົນແກະຂອງລາວຢູ່ທີ່ຄາເມນ. 3 ຊາຍຄົນນັ້ນຊື່ນາບານ, ແລະຊື່ເມຍຂອງລາວແມ່ນອາບີກາເອນ.
ຜູ້ຍິງຄົນນີ້ເປັນຄົນສະຫລາດ ແລະ ຮູບຮ່າງງົດງາມຫລາຍ. ແຕ່ຊາຍຄົນນັ້ນເປັນຄົນຫົວແຂງ ແລະ ຊົ່ວຮ້າຍໃນການກະທໍາຂອງລາວ.
ລາວເປັນລູກຫລານຂອງເຊື້ອສາຍຂອງຄາເລັບ.
4 ດາວິດໄດ້ຍິນຈາກຖິ່ນແຫ້ງແລ້ງກັນດານວ່າ ນາບານກໍາລັງຕັດຂົນແກະຂອງລາວຢູ່. 5 ດັ່ງນັ້ນ ດາວິດຈຶ່ງໄດ້ໃຊ້ຊາຍຫນຸ່ມສິບຄົນໄປ.
ດາວິດກ່າວກັບຊາຍຫນຸ່ມເຫລົ່ານັ້ນວ່າ, "ຈົ່ງຂຶ້ນໄປໃນທີ່ກາເມນ, ໄປຫານາບານ, ແລະທັກທາຍເຂົາໃນນາມຊື່ຂອງເຮົາ.
6 ໃຫ້ເຈົ້າທັງຫລາຍເວົ້າກັບລາວວ່າ, "ຂໍໃຫ້ຊີວິດທີ່ຮຸ່ງເຮືອງຈົ່ງມີແກ່ທ່ານ. ສັນຕິສຸກຈົ່ງມີແກ່ທ່ານ ແລະ ສັນຕິສຸກຈົ່ງມີແກ່ຄອບຄົວຂອງທ່ານ,
ແລະສັນຕິພາບຈົ່ງມີແກ່ທຸກສິ່ງທີ່ທ່ານມີທັງຫມົດ.
7 ຂ້າພະເຈົ້າໄດ້ຍິນວ່າທ່ານມີຄົນຕັດຂົນແກະຢູ່ຫລາຍຄົນ. ພວກຜູ້ລ້ຽງແກະຂອງທ່ານໄດ້ຢູ່ກັບພວກເຮົາ,
ແລະພວກເຮົາບໍ່ໄດ້ເຮັດອັນຕະລາຍໃກ້ໆໃຫ້ແກ່ພວກເຂົາເລີຍ, ແລະພວກເຂົາກໍບໍ່ໄດ້ຂາດອັນໃດໃນເວລາທີ່ພວກເຂົາໄດ້ຢູ່ໃນກາເມນ.
8 ຈົ່ງຖາມພວກຄົນຫນຸ່ມຂອງທ່ານໄດ້, ແລະພວກເຂົາຈະບອກທ່ານ. ບັດນີ້
ຂໍໃຫ້ພວກຄົນຫນຸ່ມຂອງຂ້າພະເຈົ້າໄດຮັບຄວາມເພິ່ງພໍໃຈຈາກທ່ານເຖີດ, ເພາະພວກເຮົາໄດ້ມາໃນມື້ທີ່ມີງານລ້ຽງ.
ຂໍໂຜດໃຫ້ສິ່ງທີ່ພໍຫາໄດ້ໃນຕອນນີ້ ແກ່ພວກຜູ້ຮັບໃຊ້ຂອງທ່ານ ແລະດາວິດລູກຊາຍຂອງທ່ານເຖີດ."
9 ເມື່ອພວກຄົນຫນຸ່ມຂອງດາວິດໄດ້ມາເຖິງ, ພວກເຂົາກໍໄດ້ກ່າວຄໍາເຫລົ່ານັ້ນແກ່ນາບານໃນນາມຂອງດາວດິດ
ແລະຫລັງຈາກນັ້ນພວກເຂົາກໍໄດ້ລໍຖ້າຢູ່. 10 ນາບານໄດ້ຕອບພວກຄົນຮັບໃຊ້ຂອງດາວິດວ່າ, "ດາວິດເປັນໃຜ, ລູກຊາຍຂອງເຢຊີແມ່ນໃຜ?
ສມັຍນີ້ມີຄົນໃຊ້ເປັນຈໍານວນຫລວງຫລາຍທີ່ຫນີໄປຈາກນາຍຂອງພວກເຂົາ. 11 ຄວນຫລືທີ່ຂ້ອຍຈະນໍາເຂົ້າຈີ່ຂອງຂ້ອຍ ແລະ ນ້ໍາຂອງຂ້ອຍ
ແລະຊີ້ນຂອງຂ້ອຍ ຊຶ່ງຂ້ອຍໄດ້ຂ້າໄວ້ສໍາລັບພວກຄົນຕັດຂົນແກະຂອງຂ້ອຍ, ແລະມອບໃຫ້ແກ່ພວກເຈົ້າຊຶ່ງມາຈາກໃສຂ້ອຍກໍບໍ່ຮູ້?"
12 ດັ່ງນັ້ນ ພວກຄົນຫນຸ່ມຂອງດາວິດກໍໄດ້ຫັນຫນີ ແລະ ກັບມາບອກດາວິດເຖິງທຸກສິ່ງທີ່ລາວໄດ້ເວົ້າ. 13 ດາວິດໄດ້ເວົ້າກັບພວກຂອງຕົນວ່າ,
"ທຸກຄົນຈົ່ງເອົາດາບຄາດແອວຂອງຕົນໄວ້." ດັ່ງນັ້ນ ທຸກຄົນກໍໄດ້ເອົາດາບຄາດແອວຂອງຕົນ. ດາວິດກໍໄດ້ເອົາດາບຂອງລາວຄາດແອວດ້ວຍ.
ມີປະມານສີ່ຮ້ອຍຄົນຕາມດາວິດຂຶ້ນໄປ, ແລະສອງຮ້ອຍຄົນຢູ່ເຝົ້າເຄື່ອງ.
14 ແຕ່ມີຄົນຫນຶ່ງໃນພວກຄົນຫນຸ່ມໄດ້ບອກນາງອາບີກາເອນ, ພັນລະຍາຂອງນາບານ; ເຂົາເວົ້າວ່າ,
"ດາວິດໄດ້ສົ່ງພວກຜູ້ສົ່ງຂ່າວມາຈາກຖິ່ນແຫ້ງແລ້ງກັນດານ ເພື່ອອວຍພອນນາຍຂອງພວກເຮົາ, ແລະລາວກັບດ່າວ່າຄົນເຫລົ່ານັ້ນ.
15 ແຕ່ຊາຍເຫລົ່ານັ້ນດີຕໍ່ເຮົາຫລາຍ. ເຮົາບໍ່ໄດ້ຖືກທໍາຮ້າຍ ແລະບໍ່ໄດ້ຂາດສິ່ງໃດຕະຫລອດເວລາທີ່ເຮົາໄດ້ໄປກັບພວກເຂົາ
ເມື່ອພວກເຮົາຍັງຢູ່ໃນທົ່ງນາທັງຫລາຍນັ້ນ.
16 ພວກເຂົາເປັນເຫມືອນກໍາແພງສໍາລັບພວກເຮົາທັງກາງເວັນແລະກາງຄືນ, ຕະຫລອດເວລາທີ່ເຮົາລ້ຽງແກະຢູ່ກັບພວກເຂົາ. 17 ດ້ວຍເຫດນີ້
ຈົ່ງຮັບຮູ້ເລື່ອງນີ້ແລະພິຈາຣະນາວ່າທ່ານຄວນຈະເຮັດຢ່າງໃດ, ເພາະຄວາມຊົ່ວຮ້າຍໄດ້ຖືກກໍາຫນົດຕໍ່ຫນ້ານາຍຂອງເຮົາແລ້ວ,
ແລະຕໍ່ຄົວເຮືອນທັງຫມົດຂອງລາວດ້ວຍ. ລາວເປັນຄົນພານທີ່ໃຜຈະໃຊ້ເຫດຜົນກັບລາວບໍ່ໄດ້ເລີຍ."
18 ແລ້ວອາບີກາເອນກໍໄດ້ຮີບຈັດເຂົ້າຈີ່ສອງຮ້ອຍກ້ອນ, ແລະເຫລົ້າອະງຸ່ນສອງຂວດ, ແກະທີ່ໄດ້ປຸງສໍາເລັດແລ້ວຫ້າໂຕ, ແລະເຂົ້າຫ້າຖັງ,
ຫມາກອະງຸ່ນແຫ້ງຫນຶ່ງຮ້ອຍຖົງ, ແລະ ຂະຫນົມຫມາກເດື່ອສອງຮ້ອຍກ້ອນ, ແລະໄດ້ບັນທຸກສິ່ງຂອງເຫລົ່ານັ້ນເທິງຫລັງລວາ.
19 ນາງກໍໄດ້ສັ່ງພວກຄົນຫນຸ່ມຂອງນາງວ່າ, "ຈົ່ງຮີບໄປກ່ອນຂ້ອຍ, ແລະຂ້ອຍຈະຕາມເຈົ້າໄປ." ແຕ່ນາງບໍ່ໄດ້ບອກນາບານສາມີຂອງນາງ.
20 ເມື່ອນາງໄດ້ຂີ່ລວາແລະໄດ້ລົງມາຕາມສັນພູເຂົາ, ດາວິດກັບພັກພວກຂອງລາວໄດ້ລົງມາທາງນາງ, ແລະນາງກໍໄດ້ພົບກັບພວກເຂົາ.
21 ບັດນີ້ດາວິດໄດ້ກ່າວວ່າ, "ໄຮ້ປະໂຫຍດເສຍແລ້ວທີ່ຂ້ອຍໄດ້ເຝົ້າທຸກສິ່ງທີ່ຊາຍຄົນນີ້ມີຢູ່ໃນຖິ່ນແຫ້ງແລ້ງກັນດານ,
ດັ່ງນັ້ນບໍ່ມີສິ່ງໃດຂອງລາວໄດ້ຂາດຫາຍໄປເລີຍຈາກທຸກສິ່ງທີ່ເປັນຂອງລາວ, ແລະລາວຕອບແທນຄວາມດີຂອງຂ້ອຍດ້ວຍຄວາມຊົ່ວ.
22 ດາວິດໄດ້ເວົ້າວ່າ ຂໍພຣະເຈົ້າຊົງກະທໍາການຢ່າງນັ້ນກັບຂ້ານ້ອຍເອງ, ແລະ ຂໍຊົງເພີ່ມໂທດນັ້ນດ້ວຍ, ຖ້າໃນມື້ອື່ນເຊົ້າ
ຂ້ານນ້ອຍໄດ້ປ່ອຍໃຫ້ຊາຍພຽງຫນຶ່ງຄົນໃນຈໍານວນຄົນທັງຫມົດທີ່ເປັນຂອງລາວຍັງມີຊີວິດຢູ່."
23 ເມື່ອນາງອາບີກາເອນເຫັນດາວິດ, ນາງກໍຮີບລົງຈາກຫລັງລວາຂອງນາງ ແລະໄດ້ກົ້ມຫນ້າລົງຕໍ່ຫນ້າດາວິດ
ແລະໄດ້ກົ້ມຫນ້າລົງເຖິງພື້ນຄໍານັບລາວ. 24 ນາງໄດ້ກົ້ມໂຕລົງທີ່ຕີນຂອງລາວ ແລະເວົ້າວ່າ, "ເຈົ້ານາຍຂອງຂ້ານ້ອຍ, ຂ້ານ້ອຍແຕ່ພຽງຜູ້ດຽວ,
ທີ່ເປັນຜູ້ຜິດ. ຂໍຄວາມກະຣຸນາໃຫ້ຂ້າໃຊ້ຂອງທ່ານໄດ້ເວົ້າໃຫ້ທ່ານຟັງ, ແລະໂຜດຟັງຖ້ອຍຄໍາຂອງຂ້າໃຊ້ຂອງທ່ານດ້ວຍ.
25 ຂໍເຈົ້ານາຍຂອງຂ້ານ້ອຍໂຜດຢ່າໄດ້ເອົາຄວາມກັບ, ນາບານ, ຜູ້ຊາຍໄຮ້ຄ່າຄົນນີ້ເລີຍ, ເພາະເຂົາເປັນຄືກັບຊື່ຂອງລາວ ຊື່ຂອງລາວຄືນາບານ,
ແລະຄວາມໂງ່ຈ້າກໍໄດ້ຢູ່ກັບລາວ. ແຕ່ສ່ວນຂ້ານ້ອຍຂ້າໃຊ້ຂອງທ່ານບໍ່ໄດ້ເຫັນພວກຄົນຫນຸ່ມຂອງທ່ານຊຶ່ງທ່ານໃຊ້ໄປ. 26 ແລ້ວບັດນີ້,
ເຈົ້ານາຍຂອງຂ້ານ້ອຍ, ພຣະຢາເວຊົງພຣະຊົນຢູ່ແນ່ສັນໃດ, ແລະທ່ານມີຊີວິດຢູ່ແນ່ສັນນັ້ນ,
ເພາະພຣະຢາເວຊົງຢັບຢັ້ງທ່ານເສຍຈາກຄວາມຜິດທີ່ເຮັດໃຫ້ເລືອດຕົກ, ແລະຈາກການແກ້ແຄ້ນດ້ວຍມືຂອງທ່ານເອງ,
ບັດນີ້ຂໍໃຫ້ພວກສັດຕຣູຂອງທ່ານ, ແລະພວກທີ່ຈະປອງຮ້າຍຕໍ່ເຈົ້ານາຍຂອງຂ້ານ້ອຍ, ເປັນເຫມືອນຢ່າງນາບານ.
27 ບັດນີ້ ຂໍໃຫ້ຂອງຂວັນນີ້ ຊຶ່ງຂ້າໃຊ້ຂອງທ່ານໄດ້ນໍາມາໃຫ້ເຈົ້ານາຍຂອງຂ້ານ້ອຍ ຂໍມອບແກ່ພວກຄົນຫນຸ່ມຜູ້ຕິດຕາມເຈົ້ານາຍຂອງຂ້ານ້ອຍ.
28 ໂຜດຍົກໂທດຄວາມຜິດຂອງຂ້າໃຊ້ຂອງທ່ານເຖີດ, ເພາະພຣະຢາເວຈະຊົງເຮັດໃຫ້ເຈົ້ານາຍຂອງຂ້ານ້ອຍເປັນເຊື້ອສາຍທີ່ຮັ່ງມີຢ່າງແນ່ນອນ,
ເພາະວ່າເຈົ້ານາຍຂອງຂ້ານ້ອຍກໍາລັງໄດ້ຕໍ່ສູ້ໃນສົງຄາມຢູ່ຝ່າຍພຣະຢາເວ; ແລະຈະບໍ່ພົບຄວາມຊົ່ວໃນຕົວທ່ານຕະຫລອດຊີວິດຂອງທ່ານ.
29 ແມ່ນວ່າມີຄົນໄດ້ລຸກຂຶ້ນໄລ່ຕາມທ່ານຫມາຍເອົາຊີວິດຂອງທ່ານກໍຕາມ,
ແຕ່ຊີວິດຂອງເຈົ້ານາຍຂອງຂ້ານ້ອຍຈະຜູກມັດຢູ່ກັບຄວາມສໍາພັນໃນກຸ່ມຂອງການມີຊີວິດໂດຍພຣະຢາເວ ພຣະເຈົ້າຂອງທ່ານ;
ແລະພຣະອົງຈະຊົງເອົາຊີວິດຂອງເຫລົ່າສັດຕຣູຂອງທ່ານອອກໄປ, ເຫມືອນດັ່ງ ເອົາກ້ອນຫີນອອກຈາກຖົງຍິງກະຖຸນ.


generated on Tue Jun 17 19:01:42 2025

[30]ພຣະຢາເວ ຈະຊົງເຮັດທຸກຢ່າງໃຫ້ສຳເລັດແກ່ເຈົ້ານາຍຂອງຂ້ານ້ອຍຕາມທີ່ພຣະອົງຊົງສັນຍາໄວ້ກັບທ່ານ,
ແລະໄດ້ຊົງແຕ່ງຕັ້ງທ່ານເປັນຜູ້ນຳເຫນືອອິສະຣາເອນ.[31]ສິ່ງນີ້ຈະບໍ່ເປັນພາຣະໃຫ້ສະດຸດສຳລັບເຈົ້ານາຍຂອງຂ້ານ້ອຍ—
ທີ່ທ່ານຈະເຮັດໃຫ້ເລືອດບໍຣິສຸດໄດ້ຫລັ່ງອອກມາ, ຫລືເພາະເຈົ້ານາຍຂອງຂ້ານ້ອຍໄດ້ພະຍາຍາມຊ່ວຍເຫລືອຕົນເອງໃຫ້ພົ້ນ. ເພາະວ່າ
ເມື່ອພຣະຢາເວຊົງເຮັດສິ່ງດີແກ່ເຈົ້ານາຍຂອງຂ້ານ້ອຍແລ້ວ, ກໍຂໍຣະນຶກເຖິງຂ້າໃຊ້ຂອງທ່ານດ້ວຍ."
[32]ດາວິດໄດ້ເວົ້າກັບນາງອາບີກາເອນວ່າ, "ຂໍພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ຂໍສາທຸການແດ່ພຣະອົງ,
ຜູ້ຊົງສົ່ງເຈົ້າໃຫ້ມາພົບກັບເຮົາໃນວັນນີ້.[33]ສະຕິປັນຍາຂອງເຈົ້າຈະໄດ້ຮັບພຣະພອນ ແລະໂຕເຈົ້າກໍໄດ້ຮັບພຣະພອນ,
ເພາະວ່າເຈົ້າໄດ້ປ້ອງກັນເຮົາໃນວັນນີ້ໃຫ້ພົ້ນຈາກການເຮັດໃຫ້ເລືອດຕົກ ແລະຈາກການແກ້ແຄ້ນດ້ວຍມືຂອງເຮົາເອງ!
[34]ເພາະໃນຄວາມຈິງແລ້ວ, ດັ່ງທີ່ພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ຜູ້ຊົງພຣະຊົນຢູ່, ຄືຜູ້ໄດ້ຊົງລະງັບເຮົາເສຍຈາກການທຳຮ້າຍເຈົ້າ,
ຖ້າເຈົ້າບໍ່ຮີບມາພົບເຮົາ, ຈະບໍ່ມີສິ່ງໃດເຫລືອແກ່ນາບານ ແມ່ນແຕ່ເດັກນ້ອຍຈັກຄົນໃນມື້ອື່ນເຊົ້າ."[35]ດັ່ງນັ້ນ
ດາວິດກໍໄດ້ຮັບບັນດາສິ່ງທີ່ນາງນຳມາໃຫ້ລາວຈາກມືຂອງນາງເອງ; ລາວໄດ້ເວົ້າກັບນາງວ່າ, "ຈົ່ງກັບເມືອເຮືອນຂອງນາງດ້ວຍສັນຕິສຸກເຖີ້ນ;
ເບິ່ງແມ໋, ເຮົາໄດ້ຟັງສຽງຂອງເຈົ້າແລ້ວ ແລະເຮົາໄດ້ຮັບເອົາຄຳຂໍຮ້ອງຂອງເຈົ້າແລ້ວ."
[36]ອາບີກາເອນກໍໄດ້ກັບໄປຫານາບານ; ເບິ່ງແມ໋, ລາວກຳລັງຈັດງານລ້ຽງໃນເຮືອນຂອງລາວ, ເຫມືອນກັບວ່າງານລ້ຽງຂອງກະສັດ;
ແລະຈິດໃຈຂອງນາບານກໍເບີກບານ, ເພາະວ່າລາວໄດ້ມຶນເມົາຫລາຍ. ດັ່ງນັ້ນນາງຈຶ່ງບໍ່ໄດ້ບອກສິ່ງໃດໃຫ້ລາວຈົນເວລາຮຸ່ງເຊົ້າ.
[37]ເມື່ອເຖິງເວລາເຊົ້າ, ເມື່ອເຫລົ້າອະງຸ່ນຊ່ວງຈາກນາບານໄປແລ້ວ, ພັນຣະຍາຂອງລາວກໍໄດ້ເລົ່າເລື່ອງເຫລົ່ານີ້ໃຫ້ລາວຟັງ;
ຫົວໃຈຂອງລາວກໍຢຸດເຕັ້ນ, ແລະລາວກໍໄດ້ກາຍເປັນດັ່ງກ້ອນຫີນ.[38]ຕໍ່ມາລາວອີກປະມາສິບວັນ ພຣະຢາເວກໍໄດ້ຊົງປຣະຫານນາບານ
ແລະລາວກໍຕາຍ.
[39]ເມື່ອດາວິດໄດ້ຍິນວ່ານາບານສິ້ນຊີວິດແລ້ວ, ລາວຈຶ່ງໄດ້ເວົ້າວ່າ, "ສາທຸການແດ່ພຣະຢາເວ
ຜູ້ຊົງແກ້ແຄ້ນການຢຽດຢ້າທີ່ຂ້ານ້ອຍໄດ້ຮັບຈາກມືຂອງນາບານ ແລະປ້ອງກັນຜູ້ຮັບໃຊ້ຂອງພຣະອົງຈາກຄວາມຊົ່ວ.
ພຣະຢາເວຊົງຕອບແທນຄວາມຊົ່ວຂອງນາບານໃຫ້ຕົກໃສ່ເທິງຫົວຂອງລາວເອງ."
ແລ້ວດາວິດກໍໄດ້ສົ່ງຄົນໄປແລະໄດ້ເວົ້າກັບອາບີກາເອນໃຫ້ມາເປັນພັນຣະຍາຂອງລາວ.[40]ເມື່ອຜູ້ຮັບໃຊ້ຂອງດາວິດມາເຖິງອາບີກາເອນທີ່ກາເມນ,
ພວກເຂົາໄດ້ເວົ້າກັບນາງວ່າ, "ດາວິດໄດ້ສົ່ງພວກເຮົາມາຫາທ່ານເພື່ອນຳທ່ານໄປເປັນພັນຣະຍາຂອງລາວ."
[41]ນາງກໍໄດ້ລຸກຂຶ້ນກົ້ມຫນ້າລົງເຖິງດິນ, ແລະກ່າວວ່າ, "ເບິ່ງແມ໋,
ຂ້າໃຊ້ຂອງທ່ານເປັນທາດທີ່ຈະລ້າງຕີນໃຫ້ພວກຜູ້ຮັບໃຊ້ຂອງເຈົ້ານາຍຂອງຂ້ານ້ອຍ."[42]ອາບີກາເອນກໍຮີບ ແລະ ໄດ້ລຸກຂຶ້ນ,
ແລະຂີ່ລວາໄປພ້ອມກັບສາວໃຊ້ຂອງນາງອີກຫ້າຄົນ; ແລະນາງກໍໄດ້ຕິດຕາມພວກຜູ້ສົ່ງຂ່າວຂອງດາວິດໄປ ແລະ
ໄດ້ກາຍເປັນພັນຣະຍາຂອງລາວ.
[43]ບັດນີ້ ດາວິດຍັງໄດ້ຮັບນາງອາຫີໂນອາມຊາວຢິດສະເຣເອນເປັນພັນຣະຍາດ້ວຍ; ທັງສອງກໍເປັນພັນຣະຍາຂອງລາວ.
[44]ໂຊນໄດ້ຍົກມີຄາລູກສາວຂອງພະອົງ, ຊຶ່ງເປັນພັນຣະຍາຂອງດາວິດ, ໃຫ້ແກ່ປັດຕີລູກຊາຍຂອງລາອິດຊາວກາລິມດ້ວຍ.


generated on Tue Jun 17 19:01:42 2025

26 [1]ຊາວຊີບມາຫາໂຊນທີ່ເມືອງກິເບອາ ແລະ ໄດ້ກ່າວວ່າ, "ດາວິດຫລົບລີ້ຢູ່ເທິງເນີນພູເຂົາຮາຄີລາ,
ຊຶ່ງຢູ່ດ້ານຫນ້າຂອງເຢຊີໂມນບໍ່ແມ່ນຫລື?"[2]ແລ້ວໂຊນຈຶ່ງໄດ້ລຸກຂຶ້ນ ແລະ ໄດ້ລົງໄປທີ່ຖິ່ນແຫ້ງແລ້ງກັນດານຊີບ,
ພ້ອມກັບຜູ້ຊາຍອິດສະຣາເອນທີ່ໄດ້ຮັບການຄັດເລືອກແລ້ວສາມພັນຄົນ, ເພື່ອຄົ້ນຫາດາວິດໃນຖິ່ນແຫ້ງແລ້ງກັນດານຊີບ.

[3]ໂຊນໄດ້ຕັ້ງຄ້າຍຢູ່ທີ່ເນີນພູຮາຄີລາ, ຊຶ່ງຢູ່ທາງດ້ານຫນ້າຂອງເຢຊີໂມນ. ແຕ່ດາວິດຍັງຄົງຢູ່ໃນຖິ່ນແຫ້ງແລ້ງກັນດານ, ແລະ
ລາວໄດ້ເຫັນວ່າໂຊນກຳລັງມາຕາມຫາລາວໃນຖິ່ນແຫ້ງແລ້ງກັນດານ.[4]ດັ່ງນັ້ນ ດາວິດກໍໄດ້ສົ່ງພວກຜູ້ສອດແນມອອກໄປ
ແລະຈຶ່ງໄດ້ຮູ້ວ່າໂຊນມາແນ່ນອນ.
[5]ແລ້ວດາວິດກໍໄດ້ລຸກຂຶ້ນ ແລະ ໄດ້ມາຍັງທີ່ຊຶ່ງໂຊນໄດ້ຕັ້ງຄ້າຍນັ້ນ; ລາວກໍໄດ້ເຫັນບ່ອນທີ່ໂຊນນອນພ້ອມກັບອັບເນລູກຊາຍຂອງເນີ,
ແມ່ທັບຂອງກອງທັບຂອງພະອົງ; ໂຊນໄດ້ນອນຢູ່ກາງເຂດຄ້າຍພັກ, ແລະພວກທະຫານກໍໄດ້ຕັ້ງຄ້າຍອ້ອມຮອບພະອົງ, ທຸກຄົນຫລັບກັນຫມົດ.
[6]ແລ້ວດາວິດກໍໄດ້ເວົ້າກັບອາຫີເມເລັກຄົນຮິດຕີ, ແລະກັບອາບີໄຊລູກຊາຍຂອງນາງເສຣູຢາ, ນ້ອງຊາຍຂອງໂຢອາບວ່າ,
"ໃຜຈະລົງໄປໃນຄ້າຍຂອງໂຊນກັບເຮົາແດ່?" ອາບີໄຊໄດ້ຕອບວ່າ, "ຂ້າພະເຈົ້າເອງ! ຂ້ານ້ອຍຈະລົງໄປກັບທ່ານ."[7]ດັ່ງນັ້ນ ດາວິດແລະ ອາບີໄຊ
ຈຶ່ງໄດ້ລົງໄປທີ່ກອງທັບນັ້ນໃນເວລາກາງຄືນ. ໂຊນໄດ້ນອນຫລັບຢູ່ກາງຄ້າຍ ມີຫອກປັກຢູ່ພື້ນດິນທີ່ເທິງຫົວຂອງພະອົງ.
ອັບເນກັບພວກທະຫານກໍໄດ້ນອນອ້ອມຂ້າງພະອົງຢູ່.[8]ແລ້ວອາບີໄຊໄດ້ເວົ້າກັບດາວິດວ່າ, "ໃນວັນນີ້
ພຣະເຈົ້າໄດ້ມອບສັດຕູຂອງທ່ານໃນມືຂອງທ່ານແລ້ວ. ບັດນີ້ ຂໍໃຫ້ຂ້ານ້ອຍແທງລາວດ້ວຍຫອກໃຫ້ຕິດດິນຄັ້ງດຽວກໍພໍ.
ຂ້ານ້ອຍບໍ່ຕ້ອງແທງລາວຄັ້ງທີສອງດອກ."
[9]ດາວິດບອກອາບີໄຊວ່າ, "ຂໍຢ່າທຳລາຍພະອົງເລີຍ; ເພາະໃຜຈະຢຽດມືອອກຕໍ່ສູ້ ຜູ້ຊຶ່ງພຣະຢາເວຊົງເຈີມໄວ້ ແລະ
ຈະບໍ່ມີຄວາມຜິດຫລື?"[10]ດາວິດໄດ້ເວົ້າວ່າ, "ພຣະຢາເວຊົງພຣະຊົນຢູ່ແນ່ສັນໃດ, ພຣະຢາເວຈະຂ້າພະອົງເອງ,
ຫລືຈະເຖິງວັນກຳຫນົດທີ່ພະອົງຕາຍ, ຫລືພະອົງຈະຕໍ່ສູ້ໃນສົງຄາມແລະຖືກຂ້າ.
[11]ຂໍພຣະຢາເວຊົງຫ້າມປາມຂ້າພະເຈົ້າບໍ່ໃຫ້ຢຽດມືອອກຕໍ່ສູ້ຜູ້ທີ່ພຣະຢາເວຊົງເຈີມໄວ້; ແຕ່ບັດນີ້, ຈົ່ງເອົາຫອກທີ່ຢູ່ເທິງຫົວຂອງພະອົງ ແລະ
ໄຫນ້ຳ, ແລະໃຫ້ເຮົາໄປກັນເຖີດ."[12]ດັ່ງນັ້ນ ດາວິດຈຶ່ງໄດ້ເອົາຫອກ ແລະ ໄຫນ້ຳຈາກເທິງຫົວຂອງໂຊນ, ແລະພວກເຂົາກໍອອກໄປ.
ບໍ່ມີຜູ້ໃດໄດ້ຮູ້ໄດ້ເຫັນພວກເຂົາ, ຫລືບໍ່ມີຜູ້ໃດຕື່ນເພາະທຸກຄົນໄດ້ນອນຫລັບຫມົດ, ເພາະພຣະຢາເວໄດ້ເຮັດໃຫ້ພວກເຂົານອນຫລັບສະຫນິດ.
[13]ແລ້ວດາວິດກໍໄດ້ຂ້າມໄປອີກຟາກຫນຶ່ງໄປ ແລະຢືນຢູ່ເທິງຍອດພູເຂົາໄກອອກໄປ; ບ່ອນທີ່ມີໄລຍະໄກລະຫວ່າງພວກເຂົາທັງສອງຝ່າຍ.
[14]ດາວິດກໍໄດ້ຮ້ອງສຽງດັງໃສ່ພວກທະຫານແລະອັບເນລູກຊາຍຂອງເນີວ່າ; ລາວກ່າວວ່າ,"ອັບເນ, ເຈົ້າບໍ່ຕອບຫລື?"
ແລ້ວອັບເນຕອບວ່າ,"ເຈົ້າເປັນໃຜມາຮ້ອງສຽງດັງຫາກະສັດຫລື?"
[15]ດາວິດໄດ້ຕອບອັບເນວ່າ, "ເຈົ້າບໍ່ແມ່ນຜູ້ຊາຍທີ່ກ້າຫານດອກຫລື? ໃນອິດສະຣາເອນມີໃຜສະເຫມີເຫມືອນເຈົ້າແດ່?
ເປັນຫຍັງເຈົ້າບໍ່ເຝົ້າກະສັດ ເຈົ້ານາຍຂອງເຈົ້າໄວ້? ເພາະໄດ້ມີຄົນຫນຶ່ງໄດ້ເຂົ້າໄປຈະປະຫານເຈົ້ານາຍຂອງເຈົ້າ.[16]ສິ່ງທີ່ເຈົ້າໄດ້ເຮັດນີ້ບໍ່ດີ.
ພຣະຢາເວຊົງພຣະຊົນຢູ່ແນ່ສັນໃດ, ພວກເຈົ້າຄວນຕາຍເພາະພວກເຈົ້າບໍ່ໄດ້ເຝົ້າລະວັງເຈົ້ານາຍຂອງພວກເຈົ້າ, ຜູ້ຊຶ່ງພຣະຢາເວໄດ້ຊົງເຈີມໄວ້.
ບັດນີ້ ເບິ່ງແມ໋ ຫອກຂອງກະສັດຢູ່ບ່ອນໃດ ແລະໄຫນ້ຳບ່ອນເທິງຫົວຂອງພະອົງນັ້ນຢູ່ບ່ອນໃດ!"
[17]ໂຊນຈື່ສຽງຂອງດາວິດໄດ້ ຈຶ່ງໄດ້ສົ່ງສຽງ ແລະກ່າວວ່າ, "ດາວິດລູກຊາຍຂອງເຮົາບໍ, ນີ້ເປັນສຽງຂອງເຈົ້າຫລື?" ດາວິດກ່າວວ່າ,
"ຂ້າແດ່ກະສັດ, ເຈົ້ານາຍຂອງຂ້ານ້ອຍ, ເປັນສຽງຂອງຂ້ານ້ອຍເອງ."[18]ລາວໄດ້ເວົ້າວ່າ, "ເປັນຫຍັງເຈົ້ານາຍຂອງຂ້ານ້ອຍ
ຈຶ່ງໄດ້ໄລ່ຕາມຜູ້ຮັບໃຊ້ຂອງພະອົງ? ຂ້ານ້ອຍໄດ້ເຮັດຫຍັງຜິດ? ມືຂອງຂ້ານ້ອຍໄດ້ເຮັດຊົ່ວອັນໃດແດ່?
[19]ບັດນີ້, ຂ້ານ້ອຍຂໍເຈົ້ານາຍຂອງຂ້ານ້ອຍ, ໄດ້ຟັງຖ້ອຍຄຳຂອງຜູ້ຮັບໃຊ້ຂອງພະອົງ. ຖ້າພຣະຢາເວໄດ້ປຸກປັ່ນພະອົງໃຫ້ຕໍ່ສູ້ຂ້ານ້ອຍ,
ຂໍໃຫ້ພຣະອົງຮັບເຄື່ອງຖວາຍບູຊາ; ຖ້າເປັນມະນຸດທີ່ໄດ້ຍົວະ, ກໍຂໍໃຫ້ພວກເຂົາເປັນທີ່ສາບແຊ່ງຕໍ່ຫນ້າພຣະຢາເວ,
ເພາະພວກເຂົາໄດ້ຂັບໄລ່ຂ້ານ້ອຍອອກໄປໃນວັນນີ້, ຈາກສ່ວນແບ່ງໃນມໍລະດົກຂອງພຣະຢາເວໄດ້ກ່າວໄວ້; ພວກເຂົາໄດ້ກ່າວກັບຂ້ານ້ອຍວ່າ,
'ຈົ່ງໄປຮັບໃຊ້ພວກພະອື່ນໆ.'[20]ບັດນີ້, ຂໍຢ່າໃຫ້ເລືອດຂອງຂ້ານ້ອຍຕົກເຖິງດິນໄກຈາກພຣະພັກຂອງພຣະຢາເວ;
ເພາະກະສັດແຫ່ງອິດສະຣາເອນໄດ້ມາເພື່ອຄົ້ນຫາຫມັດໂຕດຽວ ດັ່ງຜູ້ໄລ່ຕາມນົກກະທາຢູ່ເທິງພູເຂົາທັງຫລາຍ."
[21]ແລ້ວໂຊນໄດ້ກ່າວວ່າ, "ເຮົາໄດ້ເຮັດຜິດບາບແລ້ວ. ດາວິດ, ລູກຊາຍຂອງພໍ່ເອີຍ; ເຮົາຈະບໍ່ທຳຮ້າຍເຈົ້າອີກຕໍ່ໄປ,
ເພາະໃນວັນນີ້ຊີວິດຂອງເຮົາກໍປະເສີດໃນສາຍຕາຂອງເຈົ້າ. ເບິ່ງແມ໋, ເຮົາສະແດງໂຕເປັນຄົນໂງ່ຈ້າ ແລະ ໄດ້ເຮັດຜິດໃຫຍ່ຫລວງ."
[22]ດາວິດໄດ້ຕອບແລະກ່າວວ່າ, "ຂ້າແດ່ກະສັດ! ເບິ່ງແມ໋, ຫອກຂອງພະອົງກໍຢູ່ທີ່ນີ້, ຂໍຊົງໃຫ້ຄົນຫນຸ່ມຄົນຫນຶ່ງຂ້າມມາຮັບໄປ ແລະ
ນຳໄປຄືນໃຫ້ພະອົງສາ.[23]ພຣະຢາເວໄດ້ຕອບແທນແກ່ທຸກຄົນຕາມຄວາມຊອບທຳ ແລະ ຄວາມສັດຊື່ຂອງເຂົາ; ເພາະໃນວັນນີ້
ພຣະຢາເວໄດ້ມອບພະອົງໄວ້ໃນມືຂອງຂ້ານ້ອຍ, ແຕ່ຂ້ານ້ອຍບໍ່ປາຖະຫນາຈະຢຽດມືອອກຕໍ່ສູ້ຜູ້ທີ່ພຣະຢາເວຊົງເຈີມໄວ້.
[24]ເບິ່ງແມ໋, ໃນສາຍຕາຍຂອງຂ້ານ້ອຍ ຊີວິດຂອງພະອົງມີຄ່າສັນໃດໃນວັນນີ້, ຂໍໃຫ້ຊີວິດຂອງຂ້ານ້ອຍມີຄ່າໃນສາຍຕາຂອງພຣະຢາເວສັນນັ້ນ,
ແລະຂໍພຣະອົງຊ່ວຍກູ້ຊີວິດຂອງຂ້ານ້ອຍໃຫ້ພົ້ນຈາກຄວາມຍາກລຳບາກທັງຫມົດດ້ວຍ."[25]ແລ້ວໂຊນຈຶ່ງໄດ້ກ່າວກັບດາວິດວ່າ,
"ດາວິດລູກຊາຍຂອງພໍ່ເອີຍ! ຂໍໃຫ້ເຈົ້າໄດ້ຮັບພອນເທີ້ນ, ເຈົ້າຈະໄດ້ເຮັດສິ່ງຍິ່ງໃຫຍ່ຕ່າງໆຢ່າງແນ່ນອນ ແລະ
ຈະໄດ້ຮັບຄວາມສຳເລັດຢ່າງແນ່ນອນ." ດາວິດຈຶ່ງໄດ້ໄປຕາມທາງຂອງລາວ, ແລະໂຊນກໍກັບສູ່ພະຣາຊະວັງຂອງພະອົງ.


generated on Tue Jun 17 19:01:42 2025

# 27

[1]ດາວິດໄດ້ສຳນຶກໃນໃຈຂອງລາວວ່າ, "ຂ້ານ້ອຍຄົງຈະຕ້ອງຕາຍດ້ວຍມືຂອງໂຊນຈັກວັນຫນຶ່ງ;
ບໍ່ມີສິ່ງໃດດີກວ່າທີ່ຂ້ານ້ອຍຈະຫນີໄປຢູ່ໃນດິນແດນຂອງຄົນຟີລິດສະຕິນ;
ໂຊນກໍຈະຢຸດໃນການຕາມຫາຂ້ານ້ອຍໃນເຂດແດນຂອງອິດສະຣາເອນ; ວິທີນີ້ແຫລະທີ່ຂ້ານ້ອຍຈະຫລົບຫນີຈາກມືຂອງພະອົງໄດ້."

[2]ດາວິດໄດ້ລຸກຂຶ້ນແລະໄດ້ຂ້າມໄປ, ລາວແລະພວກພັກທີ່ຢູ່ກັບລາວທັງຫົກຮ້ອຍຄົນ, ໄດ້ໄປຫາອາກີເຊລູກຊາຍຂອງມາໂອດ,
ກະສັດແຫ່ງເມືອງກາດ.[3]ດາວິດກໍໄດ້ອາໄສຢູ່ກັບອາກີເຊທີ່ເມືອງກາດ, ທັງລາວແລະຄົນຂອງລາວ, ແລະຄອບຄົວຂອງແຕ່ລະຄົນ,
ແລະດາວິດພ້ອມກັບພັນລະຍາສອງຄົນຂອງລາວ, ຄືອາຫີໂນອາມຄົນຢິດສະຣາເອນ, ແລະອາບີກາເອນຄົນກາເມນ, ພັນລະຍາຂອງນາບານ.
[4]ມີຄົນໄດ້ໄປບອກໂຊນວ່າ ດາວິດໄດ້ຫນີໄປທີ່ເມືອງກາດແລ້ວ, ດັ່ງນັ້ນພະອົງກໍບໍ່ໄດ້ຊອກຫາລາວອີກຕໍ່ໄປ.
[5]ດາວິດຈຶ່ງໄດ້ເວົ້າກັບອາກີເຊວ່າ, "ຖ້າຂ້ານ້ອຍເປັນທີ່ພໍໃຈໃນສາຍຕາຂອງພະອົງແລ້ວ,
ຂໍຊົງໃຫ້ພວກເຂົາມອບສະຖານທີ່ແຫ່ງຫນຶ່ງໃນເມືອງທັງຫລາຍຂອງພະອົງໃຫ້ແກ່ຂ້ານ້ອຍ, ເພື່ອພວກຂ້ານ້ອຍຈະໄດ້ອາໄສຢູ່ນັ້ນ;
ເພາະວ່າບໍ່ມີເຫດຜົນທີ່ຜູ້ຮັບໃຊ້ຂອງພະອົງຈະຕ້ອງຢູ່ໃນເມືອງຮ່ວມກັບພະອົງ?"[6]ດັ່ງນັ້ນອາກີເຊກໍໄດ້ມອບສີລາກໃຫ້ລາວໃນວັນນັ້ນເອງ;
ນັ້ນເປັນເຫດຜົນວ່າ ເປັນຫຍັງສີລາກຈຶ່ງເປັນຂອງບັນດາກະສັດແຫ່ງຢູດາຈົນເຖິງທຸກວັນນີ້.
[7]ໄລຍະເວລາທີ່ດາວິດເຂົ້າໄປຢູ່ໃນດິນແດນຟີລິດສະຕິນນັ້ນ ເປັນເວລາຫນຶ່ງປີ ແລະ ອີກສີ່ເດືອນເຕັມ.
[8]ດາວິດ ແລະ ຄົນຂອງລາວກໍໄດ້ໄປໂຈມຕີຄົນເກຊູ, ຄົນເກເຊີ, ແລະຄົນອາມາເລກ; ເພາະຊົນຊາດເຫລົ່ານີ້ໄດ້ອາໄສຢູ່ໃນດິນແດນນັ້ນ,
ໄກໄປຈົນເຖິງເມືອງຊູເຖິງແຜ່ນດິນເອຢິບ, ພວກເຂົາໄດ້ອາໄສຢູ່ໃນດິນແດນນັ້ນມາຕັ້ງແຕ່ບູຮານແລ້ວ.[9]ດາວິດກໍໄດ້ໂຈມຕີແຜ່ນດິນ
ແລະບໍ່ໄດ້ໄວ້ຊີວິດຜູ້ຊາຍຫລືຜູ້ຍິງຈັກຄົນເລີຍ; ລາວໄດ້ຍຶດເອົາຝູງແກະ, ຝູງງົວ, ຝູງລາ, ຝູງອູດ, ແລະ ເສື້ອຜ້າ;
ລາວໄດ້ກັບແລະມາຫາອາກີເຊອີກຄັ້ງ.
[10]ອາກີເຊມັກຖາມວ່າ, "ວັນນີ້ ພວກເຈົ້າໄປໂຈມຕີບ່ອນໃດມາ?" ດາວິດກໍຕອບວ່າ, "ໄປໂຈມຕີທາງຕອນໃຕ້ຂອງຢູດາ," ຫລື
"ໄປໂຈມຕີທາງຕອນໃຕ້ຂອງຕະກຸນເຢຣາເມເອນ," ຫລື "ໄປໂຈມຕີທາງຕອນໃຕ້ຂອງຄົນເຄໄນ."
[11]ດາວິດບໍ່ໄດ້ນຳຊີວິດຜູ້ຊາຍຫລືຜູ້ຍິງຄົນໃດເລີຍມາທີ່ເມືອງກາດເລີຍ, ກ່າວວ່າ, "ດັ່ງນັ້ນແຫລະ
ພວກເຂົາຈະບໍ່ສາມາດບອກເລື່ອງຂອງພວກເຮົາວ່າ, 'ດາວິດໄດ້ເຮັດເຊັ່ນນັ້ນແລະເຊັ່ນນີ້.'" ນີ້ເປັນສິ່ງທີ່ລາວໄດ້ເຮັດທັງຫມົດ
ໃນຂະນະທີ່ລາວໄດ້ອາໄສຢູ່ໃນດິນແດນຄົນຟີລິດສະຕິນ.[12]ອາກີເຊກໍໄດ້ໄວ້ວາງໃຈດາວິດ, ກ່າວວ່າ,
"ລາວໄດ້ເຮັດໃຫ້ປະຊາຊົນອິດສະຣາເອນຂອງລາວກຽດຊັງລາວແທ້ໆ; ເພາະສະນັ້ນ ລາວຈຶ່ງເປັນຜູ້ຮັບໃຊ້ຂອງຂ້ອຍຕະຫລອດໄປ."

 generated on Tue Jun 17 19:01:42 2025

28 1 ສິ່ງນີ້ໄດ້ເກີດຂຶ້ນໃນວັນເຫລົ່ານັ້ນຄືຄົນຟີລິດສະຕິນໄດ້ເຕົ້າໂຮມກອງທັບຂອງພວກເຂົາ ເພື່ອເຮັດສົງຄາມສູ້ຮົບກັບອິດສະຣາເອນ.
ອາກີເຊໄດ້ເວົ້າກັບດາວິດວ່າ, "ຈົ່ງຮູ້ແນ່ວ່າ ເຈົ້າຈະອອກໄປກັບເຮົາໃນກອງທັບ,
ທັງເຈົ້າແລະຄົນຂອງເຈົ້າດ້ວຍ." 2 ດາວິດໄດ້ເວົ້າກັບອາກີເຊວ່າ, "ສຸດແລ້ວແຕ່ຈະເຫັນຄວນ ພະອົງຊິງຮູ້ວ່າ
ຜູ້ຮັບໃຊ້ຂອງພະອົງເຮັດອັນໃດໄດ້ແດ່." ອາກີເຊໄດ້ເວົ້າກັບດາວິດວ່າ, "ດັ່ງນັ້ນ
ເຮົາຈະຕັ້ງເຈົ້າໃຫ້ເປັນທະຫານອາລັກຂາຂອງເຮົາຢ່າງຖາວອນ."

3 ບັດນີ້ ຊາມູເອນໄດ້ຕາຍແລ້ວ, ແລະອິດສະຣາເອນທັງປວງກໍໄດ້ໄວ້ທຸກໃຫ້ກັບລາວ ແລະ ໄດ້ຝັງສົບລາວໄວ້ທີ່ເມືອງຣາມາ,
ຊຶ່ງເປັນບ້ານເກີດຂອງລາວເອງ. ໂຊນກໍໄດ້ກຳຈັດພວກຄົນທີ່ສື່ສານກັບຄົນຕາຍ ຫລືພວກວິນຍານເສຍຈາກແຜ່ນດິນ.
4 ແລ້ວຄົນຟີລິດສະຕິນກໍໄດ້ຊຸມນຸມກັນ ແລະໄດ້ມາຕັ້ງຄ້າຍຢູ່ທີ່ຊູແນມ, ແລະໂຊນໄດ້ຮວບຮວມອິດສະຣາເອນທັງຫມົດ,
ແລະພວກເຂົາໄດ້ຕັ້ງຄ້າຍຢູ່ທີ່ກີໂບອາ.
5 ເມື່ອໂຊນໄດ້ເຫັນກອງທັບຂອງຄົນຟີລິດສະຕິນ, ພະອົງກໍຢ້ານກົວ, ແລະໃຈຂອງພະອົງກໍສັ່ນສະທ້ານຢ້ານກົວຫລາຍ.
6 ໂຊນໄດ້ອະທິຖານຕໍ່ພຣະຢາເວ ເພື່ອຂໍຄວາມຊ່ວຍເຫລືອ, ແຕ່ພຣະຢາເວບໍ່ໄດ້ຕອບພະອົງ—ບໍ່ວ່າ ດ້ວຍຄວາມຝັນ, ຫລືດ້ວຍອຸຣິມ,
ຫລືໂດຍທາງພວກຜູ້ປະກາດພຣະທຳ. 7 ແລ້ວໂຊນຈຶ່ງໄດ້ສັ່ງພວກຜູ້ຮັບໃຊ້ຂອງພະອົງວ່າ, "ຈົ່ງໄປຄົ້ນຫາຍິງຄົນຜູ້ທີ່ສາມາດເວົ້າກັບຄົນຕາຍໄດ້,
ເພື່ອວ່າເຮົາຈະໄດ້ໄປຫານາງ ແລະຂໍຄຳແນະນຳຈາກນາງ." ຜູ້ຮັບໃຊ້ທັງຫລາຍຂອງພະອົງກໍໄດ້ເວົ້າວ່າ, "ເບິ່ງແມ່,
ມີຜູ້ຍິງຄົນຫນຶ່ງຢູ່ໃນເຮືອນເອນໂດນ ຜູ້ທີ່ປະກາດໂຕວ່າ ສາມາດເວົ້າກັບຄົນຕາຍໄດ້."
8 ໂຊນຈຶ່ງໄດ້ປອມຕົວ, ໄດ້ນຸ່ງເຄື່ອງທຳມະດາ, ແລະໄດ້ອອກໄປ, ທັງພະອົງກັບຜູ້ຊາຍສອງຄົນ;
ພວກເຂົາໄດ້ໄປຫາຜູ້ຍິງຄົນຊຶ່ງຄົນນັ້ນໃນເວລາກາງຄືນ. ພະອົງໄດ້ກ່າວວ່າ, "ຂໍເຂົ້າຊົງໃຫ້ນາຍຂອງຂ້ອຍ,
ຂ້ອຍຂໍຮ້ອງເຈົ້າໂດຍການໃຫ້ວິນຍານເຂົ້າສິງ, ແລະຈົ່ງເອີ້ນຫາຄົນຕາມຊື່ທີ່ຂ້ອຍໄດ້ບອກໃຫ້ເຈົ້າ." 9 ຍິງຄົນນັ້ນໄດ້ກ່າວກັບພະອົງວ່າ, "ເບິ່ງແມ່,
ເຈົ້າຮູ້ຢູ່ແລ້ວວ່າ ໂຊນໄດ້ເຮັດຢ່າງໃດແດ່, ທີ່ລາວໄດ້ກຳຈັດພວກຫມໍຜີ ແລະພວກທີ່ສື່ສານກັບຄົນຕາຍຫລືວິນຍານທັງຫລາຍ. ດັ່ງນັ້ນ
ເປັນຫຍັງທ່ານຈຶ່ງໄດ້ມາວາງກັບດັກຊີວິດຂອງຂ້ານ້ອຍ,
ເພື່ອໃຫ້ຂ້ານ້ອຍຕາຍຫລື?" 10 ໂຊນໄດ້ປະຕິຍານໃນນາມຂອງພຣະຢາເວກັບຜູ້ຍິງຄົນນັ້ນວ່າ, "ພຣະຢາເວຊົງພຣະຊົນຢູ່ແນ່ນອນສັນໃດ,
ເຈົ້າຈະບໍ່ຖືກລົງໂທດເພາະເລື່ອງນີ້ສັນນັ້ນ."
11 ແລ້ວຜູ້ຍິງຄົນນັ້ນຈຶ່ງໄດ້ຖາມວ່າ, "ເຈົ້າຈະໃຫ້ຂ້ອຍເອີ້ນຫາໃຜຂຶ້ນມາໃຫ້ເຈົ້າ?" ໂຊນໄດ້ກ່າວວ່າ,
"ຈົ່ງເອີ້ນຊາມູເອນຂຶ້ນມາໃຫ້ຂ້ອຍ." 12 ເມື່ອຜູ້ຍິງຄົນນັ້ນໄດ້ເຫັນຊາມູເອນ, ນາງຈຶ່ງໄດ້ຮ້ອງສຽງດັງແລະໄດ້ເວົ້າກັບໂຊນ, ກ່າວວ່າ,
"ຍ້ອນຫຍັງພະອົງຈຶ່ງຫລອກລວງຂ້ານ້ອຍ? ເພາະວ່າພະອົງຄືໂຊນ."
13 ກະສັດໄດ້ເວົ້າກັບນາງວ່າ, "ຢ່າຢ້ານເລີຍ. ເຈົ້າໄດ້ເຫັນຫຍັງ?" ຍິງຄົນນັ້ນໄດ້ເວົ້າກັບໂຊນວ່າ,
"ຂ້ານ້ອຍເຫັນພະເຈົ້າອົງຫນຶ່ງຂຶ້ນມາຈາກແຜ່ນດິນ." 14 ພະອົງໄດ້ຖາມນາງວ່າ, "ຮູບຮ່າງຫນ້າຕາຂອງລາວເປັນແນວໃດ?" ນາງຕອບວ່າ,
"ເປັນຜູ້ຊາຍແກ່ກຳລັງຂຶ້ນມາ; ລາວແຕ່ງກາຍດ້ວຍເສື້ອຄຸມ. "ໂຊນກໍໄດ້ຮັບຮູ້ວ່າ ນັ້ນແມ່ນຊາມູເອນ, ແລະ ລາວໄດ້ໂນ້ມໂຕລົງເຖິງດິນ
ເພື່ອສະແດງຄວາມນັບຖື.
15 ຊາມູເອນໄດ້ເວົ້າກັບໂຊນວ່າ, "ເປັນຫຍັງທ່ານຈຶ່ງໄດ້ລົບກວນຂ້ານ້ອຍ ແລະໄດ້ເອີ້ນຂ້ານ້ອຍຂຶ້ນມາ?" ໂຊນໄດ້ຕອບວ່າ,
"ຂ້າພະເຈົ້າມີຄວາມທຸກຫລາຍ, ເພາະຄົນຟີລິດສະຕິນກຳລັງມາເຮັດສົງຄາມກັບຂ້າພະເຈົ້າ, ແລະພຣະເຈົ້າໄດ້ປະຖິ້ມຂ້າພະເຈົ້າໄປເສຍແລ້ວ
ແລະບໍ່ໄດ້ຕອບຂ້າພະເຈົ້າອີກເລີຍ, ບໍ່ວ່າໂດຍພວກຜູ້ປະກາດພຣະທຳ, ຫລືໂດຍທາງຄວາມຝັນ. ເພາະສະນັ້ນຂ້າພະເຈົ້າຈຶ່ງໄດ້ເອີ້ນທ່ານຂຶ້ນມາ,
ເພື່ອທ່ານຈະໄດ້ແຈ້ງຂ້າພະເຈົ້າວ່າ, ຂ້າພະເຈົ້າຈະເຮັດຢ່າງໃດດີ."
16 ຊາມູເອນໄດ້ກ່າວວ່າ, "ທ່ານຈະຖາມຫຍັງຂ້ານ້ອຍ, ໃນເມື່ອພຣະຢາເວໄດ້ຫນີໄປຈາກທ່ານແລ້ວ,
ແລະພຣະອົງໄດ້ມອບທ່ານໄວ້ໃນມືຂອງຜູ້ເປັນສັດຕູຂອງທ່ານ? 17 ພຣະຢາເວໄດ້ຊົງກະທຳແກ່ທ່ານດັ່ງທີ່ພຣະອົງໄດ້ກ່າວແລ້ວນັ້ນ.
ພຣະຢາເວໄດ້ຍຶດເອົາອານາຈັກນັ້ນໄປຈາກທ່ານ ແລະພຣະອົງໄດ້ມອບໃຫ້ແກ່ຄົນອື່ນ—ຄືດາວິດ.
18 ເພາະທ່ານບໍ່ໄດ້ເຊື່ອຟັງສຽງຂອງພຣະຢາເວ ແລະບໍ່ໄດ້ເຮັດຕາມຄວາມໂກດຮ້າຍຂອງພຣະອົງທີ່ມີຕໍ່ອາມາເຫລັກ,
ພຣະອົງຈຶ່ງໄດ້ຊົງກະທຳສິ່ງນີ້ແກ່ທ່ານໃນວັນນີ້. 19 ຍິ່ງໄປກວ່ານັ້ນອີກ,
ພຣະຢາເວຈະມອບອິດສະຣາເອນພ້ອມທັງໂຕຂອງທ່ານໄວ້ໃນມືຂອງຄົນຟີລິດສະຕິນ.
ມື້ອື່ນໂຕຂອງທ່ານແລະພ້ອມກັບລູກຊາຍທັງຫລາຍຂອງທ່ານຈະຢູ່ກັບເຮົາ.
ພຣະຢາເວຈະມອບກອງທັບອິດສະຣາເອນໄວ້ໃນມືຂອງຄົນຟີລິດສະຕິນ."
20 ແລ້ວໂຊນກໍໄດ້ລົ້ມລົງຢຽດໂຕຊື່ເທິງພື້ນດິນທັນທີ ແລະແຮງຢ້ານກົວຫລາຍຂຶ້ນ ເພາະຖ້ອຍຄຳຂອງຊາມູເອນ. ບໍ່ມີກຳລັງເຫລືອຢູ່ໃນພະອົງ,
ເພາະພະອົງບໍ່ໄດ້ຮັບປະທານອາຫານຕະຫລອດມື້, ຕະຫລອດຄືນ. 21 ຍິງຄົນນັ້ນກໍໄດ້ເຂົ້າມາຫາໂຊນ
ແລະເມື່ອນາງເຫັນວ່າພະອົງອຸກອັ່ງໃຈຫລາຍ, ນາງຈຶ່ງໄດ້ເວົ້າວ່າ, "ເບິ່ງແມ່, ສາວໃຊ້ຂອງພະອົງໄດ້ຟັງສຽງຂອງພະອົງ;
ຂ້ານ້ອຍໄດ້ຍອມສ່ຽງຊີວິດ ແລະຍອມຟັງຖ້ອຍຄຳຂອງພະອົງໄດ້ເວົ້າກັບຂ້ານ້ອຍ.
22 ເພາະສະນັ້ນບັດນີ້, ຈົ່ງຟັງຄຳຮ້ອງຂໍຂອງສາວໃຊ້ຂອງພະອົງແດ່ຖ້ອນ, ແລະຂໍໃຫ້ຂ້ານ້ອຍຈັດຕຽມອາຫານເລັກນ້ອຍຕໍ່ຫນ້າພະອົງ. ຂໍໃຫ້ກິນ
ເພື່ອພະອົງຈະມີກຳລັງ ເມື່ອພະອົງໄປຕາມທາງຂອງພະອົງ." 23 ແຕ່ໂຊນໄດ້ປະຕິເສດ ແລະໄດ້ກ່າວວ່າ, "ເຮົາຈະບໍ່ກິນ."
ແຕ່ພວກຜູ້ຮັບໃຊ້ຂອງພະອົງ, ພ້ອມກັບຍິງຄົນນັ້ນ, ໄດ້ອ້ອນວອນພະອົງ, ແລະພະອົງກໍໄດ້ຟັງສຽງຂອງພວກເຂົາ. ພະອົງໄດ້ລຸກຂຶ້ນຈາກພື້ນດິນ
ແລະໄດ້ນັ່ງເທິງຕຽງ.
24 ຍິງຄົນນັ້ນມີລູກງົວຕຸ້ຍພີຢູ່ໃນເຮືອນຫນຶ່ງໂຕ; ນາງກໍໄດ້ຮີບຂ້າເສຍ; ນາງໄດ້ເອົາແປ້ງມານວດ, ໄດ້ປີ້ງເຮັດເຂົ້າຈີ່
ແລະໄດ້ເຮັດເຂົ້າຈີ່ບໍ່ມີເຊື້ອແປ້ງ. 25 ນາງກໍໄດ້ນຳມາຖວາຍໃຫ້ໂຊນ ແລະພວກຜູ້ຮັບໃຊ້ຂອງພະອົງ, ແລະພວກເຂົາໄດ້ກິນ.
ແລ້ວພວກເຂົາໄດ້ລຸກຂຶ້ນ ແລະກັບໄປໃນຕອນກາງຄືນ.


generated on Tue Jun 17 19:01:42 2025

29 [1]ບັດນີ້ ພວກຟີລິດສະຕິນໄດ້ເຕົ້າໂຮມກອງທັບທັງປວງຂອງພວກເຂົາຢູ່ທີ່ເອເຟກ; ຄົນອິດສະຣາເອນກໍໄດ້ຕັ້ງຄ້າຍຢູ່ທີ່ນ້ຳພຸ
ຊຶ່ງຢູ່ໃນຢິດສະເຣເອນ.[2]ບັນດາເຈົ້າຊາຍຂອງຄົນຟີລິດສະຕິນໄດ້ຍ່າງຜ່ານໄປຕາມກອງຮ້ອຍແລະຕາມກອງພັນ;
ດາວິດແລະຄົນຂອງລາວກໍຜ່ານໄປກອງລະວັງຫລັງກັບອາກິເຊ.

[3]ແລ້ວບັນດາເຈົ້ານາຍຂອງຄົນຟີລິດສະຕິນໄດ້ກ່າວວ່າ, "ພວກເຮັບເຣີເຫລົ່ານີ້ມາເຮັດຫຍັງຢູ່ບ່ອນນີ້?"
ອາກິເຊກໍໄດ້ເວົ້າກັບພວກເຈົ້າຊາຍຄົນຟີລິດສະຕິນວ່າ, "ນີ້ບໍ່ແມ່ນດາວິດ, ຜູ້ຮັບໃຊ້ຂອງໂຊນຫລື, ລາວຢູ່ກັບເຮົາມາຫລາຍວັນ,
ຫລືຫລາຍປີແລ້ວ, ແລະເຮົາຍັງບໍ່ເຄີຍພົບຄວາມຜິດໃນໂຕຂອງລາວເລີຍ ນັບຕັ້ງແຕ່ວັນທີ່ລາວຫນີມາຫາເຮົາຈົນເຖິງວັນນີ້?"
[4]ແຕ່ພວກເຈົ້າຊາຍຂອງຄົນຟີລິດສະຕິນກໍໄດ້ໂກດຮ້າຍຕໍ່ພະອົງ; ພວກເຂົາໄດ້ເວົ້າກັບພະອົງວ່າ, "ຂໍສົ່ງຊາຍຄົນນັ້ນໄປໃຫ້ພົ້ນ,
ເພື່ອໃຫ້ລາວກັບໄປຢູ່ທີ່ບ່ອນພະອົງໄດ້ປະທານໃຫ້ລາວສາ; ຢ່າໃຫ້ລາວລົງໄປສະຫນາມຮົບກັບພວກເຮົາເລີຍ,
ເພື່ອວ່າທີ່ລາວຈະບໍ່ໄດ້ກາຍເປັນສັດຕູຂອງພວກເຮົາໃນສະຫນາມຮົບ. ເພາະວ່າຊາຍຄົນນີ້ຈະຄືນດີກັບເຈົ້ານາຍຂອງລາວໄດ້ຢ່າງໃດ?
ບໍ່ແມ່ນຍ້ອນຫົວຂອງຄົນຂອງພວກເຮົາຫລື?
[5]ຄົນນີ້ບໍ່ແມ່ນດາວິດຜູ້ຊຶ່ງພວກເຂົາຮ້ອງເພງເຕັ້ນລຳຕໍ່ກັນແລະກັນ, ກ່າວວ່າ, "ໂຊນຂ້າຄົນເປັນພັນໆ, ແລະດາວິດຂ້າຄົນເປັນຫມື່ນໆຫລື'?"
[6]ແລ້ວອາກິເຊຈຶ່ງໄດ້ເອີ້ນດາວິດມາ ແລະເວົ້າກັບລາວວ່າ, "ພຣະຢາເວຊົງພຣະຊົນຢູ່ແນ່ສັນໃດ, ເຈົ້າໄດ້ປະຕິບັດຕົນເປັນຄົນດີມາຕະຫລອດ,
ແລະການທີ່ເຈົ້າອອກໄປ ແລະກັບການເຂົ້າມາຂອງເຈົ້າກັບຂ້ອຍໃນກອງທັບນັ້ນດີໃນສາຍຕາຂອງຂ້ອຍ; ຂ້ອຍບໍ່ໄດ້ພົບຄວາມຜິດໃນໂຕເຈົ້າ
ນັບຕັ້ງແຕ່ວັນທີ່ເຈົ້າໄດ້ມາຢູ່ກັບຂ້ອຍຈົນເຖິງທຸກວັນນີ້. ຢ່າງໃດກໍຕາມ ພວກເຈົ້າຊາຍທັງຫລາຍບໍ່ມັກເຈົ້າເລີຍ.[7]ດັ່ງນັ້ນບັດນີ້
ຈົ່ງກັບໄປຢ່າງສັນຕິເຖີດ, ເພື່ອທີ່ເຈົ້າຈະບໍ່ເປັນທີ່ຂັດໃຈພວກເຈົ້າຊາຍຂອງຄົນຟີລິດສະຕິນ."
[8]ດາວິດກໍໄດ້ເວົ້າກັບອາກິເຊວ່າ, "ແຕ່ຂ້ານ້ອຍໄດ້ເຮັດສິ່ງໃດຫລື? ພະອົງໄດ້ພົບສິ່ງໃດໃນໂຕຂອງຜູ້ຮັບໃຊ້ຂອງພະອົງ
ນັບຕັ້ງແຕ່ວັນທີ່ຂ້ານ້ອຍໄດ້ມາຢູ່ຕໍ່ຫນ້າພະອົງຈົນເຖິງທຸກວັນນີ້,
ທີ່ຂ້ານ້ອຍອາດຈະບໍ່ໄປສູ້ຮົບກັບພວກສັດຕູຂອງເຈົ້ານາຍຂອງຂ້ານ້ອຍຫລື?"[9]ອາກິເຊກໍໄດ້ຕອບແລະກ່າວແກ່ດາວິດວ່າ, "ເຮົາຮູ້ແລ້ວວ່າ
ເຈົ້າບໍ່ມີຂໍ້ຕຳຫນິໃດໆໃນສາຍຕາຂອງເຮົາ ເຫມືອນກັບເທວະດາຂອງພຣະເຈົ້າ; ຢ່າງໃດກໍຕາມ,
ບັນດາເຈົ້າຊາຍຂອງຄົນຟີລິດສະຕິນໄດ້ກ່າວວ່າ, 'ລາວຈະຕ້ອງບໍ່ຂຶ້ນໄປກັບພວກເຮົາໃນສົງຄາມ.'
[10]ດັ່ງນັ້ນບັດນີ້ ຈົ່ງລຸກຂຶ້ນແຕ່ເຊົ້າໃນມື້ອື່ນພ້ອມກັບພວກຄົນຮັບໃຊ້ຂອງນາຍຂອງຜູ້ທີ່ໄດ້ມາກັບເຈົ້າ; ທັນທີທີ່ພວກເຈົ້າລຸກຂຶ້ນແຕ່ເຊົ້າໆນັ້ນ
ແລະພໍເມື່ອຟ້າສາງ, ກໍຈົ່ງໄປເລີຍ."[11]ດັ່ງນັ້ນ ດາວິດຈຶ່ງໄດ້ລຸກຂຶ້ນຕັ້ງແຕ່ເຊົ້າມືດ, ທັງໂຕລາວພ້ອມກັບພັກພວກຂອງລາວ,
ເພື່ອອອກເດີນທາງໃນຕອນເຊົ້າ, ກັບໄປຍັງແຜ່ນດິນຂອງຄົນຟີລິດສະຕິນ. ແຕ່ຄົນຟີລິດສະຕິນໄດ້ຂຶ້ນໄປຍັງຢິດສະເຣເອນ.

 generated on Tue Jun 17 19:01:42 2025

30 [1]ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນ, ເມື່ອດາວິດແລະຄົນຂອງລາວໄດ້ມາເຖິງຊິກລັກໃນວັນທີສາມ, ຄົນອາມາເລກໄດ້ມາປຸ້ນເນແກບແລະຊິກລັກ.
ພວກເຂົາໄດ້ໂຈມຕີຊິກລັກ, ໄດ້ເຜົາຊິກລາກເສຍ,[2]ແລະໄດ້ຈັບພວກຜູ້ຍິງກັບທຸກຄົນທີ່ຢູ່ໃນນັ້ນ, ທັງເດັກນ້ອຍແລະຜູ້ໃຫຍ່.
ພວກເຂົາບໍ່ໄດ້ຂ້າໃຜ, ແຕ່ໄດ້ກວາດຕ້ອນໄປຕາມທາງຂອງພວກເຂົາ.

[3]ເມື່ອດາວິດ ແລະ ພັກພວກຂອງລາວມາເຖິງເມືອງນັ້ນ, ເມືອງກໍໄດ້ຖືກເຜົາໄປແລ້ວ, ແລະບັນດາພັນລະຍາຂອງພວກເຂົາ,
ບັນດາລູກຊາຍຂອງພວກເຂົາ, ແລະບັນດາລູກສາວຂອງພວກເຂົາໄດ້ຖືກຈັບໄປເປັນຊະເລີຍ.
[4]ແລ້ວດາວິດແລະພວກປະຊາຊົນທີ່ໄດ້ຢູ່ກັບລາວໄດ້ຮ້ອງໄຫ້ໂອ່ຍຄາງ ແລະໄດ້ຮ້ອງໄຫ້ຈົນພວກເຂົາບໍ່ມີກຳລັງຈະຮ້ອງໄຫ້ອີກແລ້ວ.
[5]ບັນດາເມຍທັງສອງຂອງດາວິດກໍໄດ້ຖືກຈັບໄປເປັນຊະເລີຍ, ຄືອາຫີໂນອາມຄົນຢິດສະເຣເອນ,
ແລະອາບີກາເອນພັນລະຍາຂອງນາບານຄົນກາເມນ.[6]ດາວິດກໍໄດ້ເປັນທຸກຫລາຍ,
ເພາະພວກປະຊາຊົນໄດ້ເວົ້າກັນວ່າຈະຂວ້າງກ້ອນຫີນໃສ່ລາວໃຫ້ຕາຍ, ເພາະຈິດໃຈຂອງພວກປະຊາຊົນຂົມຂື່ນຫລາຍ,
ເລື່ອງພວກລູກຊາຍແລະລູກສາວຂອງພວກເຂົາແຕ່ລະຄົນ; ແຕ່ດາວິດໄດ້ເຂັ້ມແຂງຂຶ້ນໃນພຣະຢາເວ, ພຣະເຈົ້າຂອງລາວ.
[7]ດາວິດຈຶ່ງໄດ້ເວົ້າກັບອາບີຢາທາ ລູກຊາຍຂອງປະໂລຫິດອາຫີເມເຫລັກວ່າ, "ຂ້າພະເຈົ້າຂໍອ້ອນວອນທ່ານ,
ໂຜດນຳເສື້ອເອໂຟດມາທີ່ນີ້ມາໃຫ້ຂ້າພະເຈົ້າ." ອາບີຢາທາກໍໄດ້ນຳເອົາເສື້ອເອໂຟດມາໃຫ້ດາວິດ.[8]ດາວິດໄດ້ທູນຖາມພຣະຢາເວ
ເພື່ອຂໍການຊົງນຳວ່າ, "ຖ້າຂ້ານ້ອຍຈະໄລ່ຕາມກອງທະຫານນີ້ໄປ, ຂ້ານ້ອຍຈະໄປທັນພວກເຂົາຫລືບໍ່?" ພຣະຢາເວໄດ້ຊົງຕອບລາວວ່າ,
"ຈົ່ງໄລ່ຕາມເຖີດ, ເພາະເຈົ້າຈະໄປທັນພວກເຂົາແນ່ນອນ, ແລະຈະຊ່ວຍກູ້ທຸກສິ່ງໄດ້ແນ່ນອນ."
[9]ດັ່ງນັ້ນ ດາວິດກໍໄດ້ອອກໄປ, ທັງລາວພ້ອມກັບຜູ້ຊາຍຜູ້ທີ່ຢູ່ກັບລາວຫົກຮ້ອຍຄົນ; ພວກເຂົາໄດ້ມາເຖິງແມ່ນ້ຳເບໂສ,
ໃນບ່ອນທີ່ຄົນເຫລົ່ານັ້ນທີ່ຖືກປະຖິ້ມໄວ້.[10]ແຕ່ດາວິດກໍໄດ້ໄລ່ຕິດຕາມຕໍ່ໄປ, ທັງໂຕລາວແລະຜູ້ຊາຍສີ່ຮ້ອຍຄົນ; ສ່ວນຜູ້ຊາຍສອງຮ້ອຍຄົນ
ຄືພວກທີ່ອ່ອນເພຍເກີນທີ່ຈະຂ້າມແມ່ນ້ຳເບໂສກໍຢຸດພັກຜ່ອນຢູ່ຂ້າງຫລັງ.
[11]ພວກເຂົາພົບຄົນເອຢິບຄົນຫນຶ່ງຢູ່ໃນທົ່ງນາ ແລະໄດ້ນຳໂຕລາວມາຫາດາວິດ; ພວກເຂົາໄດ້ໃຫ້ເຂົ້າຈີ່ແກ່ລາວ, ແລະລາວໄດ້ກິນ;
ພວກເຂົາກໍໃຫ້ລາວດື່ມນ້ຳ;[12]ແລະພວກເຂົາໃຫ້ເຂົ້າຫນົມຫມາກເດື່ອ ແລະ ຫມາກອະງຸ່ນແຫ້ງສອງຖົງແກ່ລາວ. ເມື່ອລາວໄດ້ກິນແລ້ວ,
ລາວກໍມີກຳລັງຂຶ້ນມາອີກເທື່ອຫນຶ່ງ, ເພາະວ່າລາວບໍ່ໄດ້ກິນເຂົ້າຈີ່ຫລືດື່ມນ້ຳມາສາມວັນສາມຄືນແລ້ວ.
[13]ດາວິດໄດ້ຖາມລາວວ່າ, "ເຈົ້າເປັນຄົນຂອງໃຜ? ເຈົ້າມາຈາກໃສ? ລາວຕອບວ່າ, "ຂ້ານ້ອຍເປັນຄົນຫນຸ່ມແຫ່ງເອຢິບ,
ຄົນໃຊ້ຂອງຄົນອາມາເລກ; ເມື່ອສາມວັນມາແລ້ວນາຍຂອງຂ້ານ້ອຍໄດ້ປະຖິ້ມຂ້ານ້ອຍ ເພາະວ່າຂ້ານ້ອຍໄດ້ປ່ວຍມາສາມວັນແລ້ວ.
[14]ພວກເຮົາໄດ້ມາປຸ້ນທີ່ເນແກບຂອງຄົນເຄເຣທີ, ແລະປຸ້ນເຄື່ອງຂອງໆຢູດາ, ແລະທີ່ເນແກບຂອງຄາເລັບ, ແລະພວກເຮົາໄດ້ເຜົາເມືອງຊິກລັກ."
[15]ດາວິດໄດ້ກ່າວກັບລາວວ່າ, "ເຈົ້າຈະພາເຮົາລົງໄປເຖິງພວກທີ່ມາປຸ້ນນີ້ໄດ້ຫລືບໍ່?" ຄົນເອຢິບໄດ້ຕອບວ່າ,
"ຂໍປະຕິຍານແກ່ຂ້ານ້ອຍໃນພຣະນາມຂອງພຣະເຈົ້າວ່າຈະບໍ່ປະຫານຂ້ານ້ອຍ
ຫລືຈະບໍ່ທໍລະຍົດໂດຍການມອບຂ້ານ້ອຍໄວ້ໃນມືຂອງນາຍຂອງຂ້ານ້ອຍ, ແລະຂ້ານ້ອຍຈຶ່ງຈະພາທ່ານໄປທີ່ພວກປຸ້ນນັ້ນ."
[16]ເມື່ອຄົນເອຢິບໄດ້ພາດາວິດລົງໄປແລ້ວ, ກໍພົບພວກປຸ້ນກໍໄດ້ກະຈາຍກັນຢູ່ເຕັມທົ່ວພື້ນທີ່, ຕ່າງກໍກິນແລະດື່ມແລະເຕັ້ນລຳ
ເພາະເຄື່ອງຂອງທີ່ປຸ້ນມາໄດ້ຢ່າງຫລວງຫລາຍ ຊຶ່ງພວກເຂົາເອົາມາຈາກແຜ່ນດິນຟີລິດສະຕິນ ແລະຈາກແຜ່ນດິນຂອງຢູດາ.
[17]ດາວິດກໍໄດ້ຂ້າຟັນພວກເຂົາຕັ້ງແຕ່ຍາມຄ່ຳຄືນຈົນຮອດຕອນເຊົ້າວັນໃຫມ່. ບໍ່ມີຜູ້ຊາຍຄົນໃດຫນີລອດຈາກພວກເຂົາໄປໄດ້ຈັກຄົນເລີຍ,
ຍົກເວັ້ນພວກຄົນຫນຸ່ມສີ່ຮ້ອຍຄົນຊຶ່ງໄດ້ຂີ່ອູດແລະຫນີໄປ.
[18]ດາວິດໄດ້ກອບກູ້ເອົາເຄື່ອງຂອງທີ່ຄົນອາມາເລກໄດ້ນຳໄປຄືນມາໄດ້ທັງຫມົດ; ແລະດາວິດກໍໄດ້ຊ່ວຍພັນລະຍາທັງສອງຂອງລາວມາໄດ້.
[19]ບໍ່ມີສິ່ງໃດຂອງພວກເຂົາທີ່ຂາດໄປເລີຍ, ບໍ່ວ່າຈະເລັກນ້ອຍຫລືໃຫຍ່, ບໍ່ວ່າພວກລູກຊາຍຫລືພວກລູກສາວ,
ບໍ່ວ່າສິ່ງຂອງທີ່ຍຶດມາຫລືສິ່ງຂອງທີ່ຖືກປຸ້ນໄປ, ຫລືສິ່ງໃດກໍຕາມທີ່ພວກເຂົາເຫລົ່ານັ້ນໄດ້ເອົາໄປເປັນຂອງພວກເຂົາ. ດາວິດໄດ້ຄືນມາທຸກຢ່າງ.
[20]ດາວິດຍັງໄດ້ຍຶດຝູງສັດລ້ຽງທັງຫມົດ ແລະຝູງສັດຕ່າງໆ, ຊຶ່ງພວກເຂົາໄລ່ຕ້ອນໄປຂ້າງຫນ້າຝູງສັດອື່ນໆ. ພວກເຂົາກ່າວວ່າ,
"ນີ້ເປັນສິ່ງທີ່ດາວິດຍຶດມາໄດ້."
[21]ແລ້ວດາວິດກໍໄດ້ກັບມາຫາຜູ້ຊາຍສອງຮ້ອຍຄົນ ຜູ້ທີ່ອ່ອນກຳລັງທີ່ຈະຕິດຕາມລາວໄປ,
ພວກເຫລົ່ານີ້ທີ່ພວກເຂົາໄດ້ໃຫ້ພັກຜ່ອນຢູ່ທີ່ແມ່ນ້ຳເບໂສ. ພວກເຂົາໄດ້ອອກໄປພົບດາວິດ ແລະພວກປະຊາຊົນທີ່ຢູ່ກັບລາວ.
ເມື່ອດາວິດໄດ້ເຂົ້າມາໃກ້ປະຊາຊົນເຫລົ່ານີ້, ລາວກໍໄດ້ທັກທາຍພວກເຂົາ.
[22]ແລ້ວບັນດາຄົນຊົ່ວຮ້າຍແລະຄົນໄຮ້ຄ່າທັງຫລາຍທີ່ຢູ່ທ່າມກາງຄົນເຫລົ່ານັ້ນທີ່ໄດ້ຕິດຕາມດາວິດໄປກ່າວວ່າ,
"ເພາະພວກເຂົາບໍ່ໄດ້ໄປກັບພວກເຮົາ, ພວກເຮົາຈະບໍ່ໃຫ້ສິ່ງທີ່ເຮົາຍຶດມາໄດ້ແກ່ພວກເຂົາ. ຍົກເວັ້ນໃຫ້ຜູ້ຊາຍແຕ່ລະຄົນໄດ້ມາເອົາພັນລະຍາ
ແລະ ບັນດາລູກທັງຫລາຍຂອງເຂົາ, ນຳພາພວກເຂົາ, ແລະ ໄປເສຍ."
[23]ແລ້ວດາວິດກ່າວວ່າ, "ພີ່ນ້ອງຂອງຂ້ານ້ອຍເອີຍ, ພວກທ່ານຢ່າໄດ້ເຮັດຢ່າງນັ້ນກັບສິ່ງຊຶ່ງພຣະຢາເວໄດ້ມອບແກ່ພວກເຮົາເລີຍ.
ພຣະອົງຜູ້ໄດ້ຊົງພິທັກຮັກສາພວກເຮົາໄວ້ແລະໄດ້ມອບພວກປຸ້ນຊຶ່ງມາຕໍ່ສູ້ພວກເຮົາໄວ້ໃນມືຂອງພວກເຮົາ.
[24]ໃຜແດ່ທີ່ຈະຟັງພວກທ່ານໃນເລື່ອງນີ້? ເພາະຄົນທີ່ລົງໄປໃນສົງຄາມໄດ້ຮັບສ່ວນແບ່ງຂອງພວກເຂົາຢ່າງໃດ, ຄົນທີ່ຢູ່ຮັກສາການ
ກໍຈະໄດ້ຮັບສ່ວນແບ່ງແລະໄດ້ຮັບເຫມືອນກັນ."[25]ຕັ້ງແຕ່ນັ້ນເປັນຕົ້ນໄປຈົນເຖິງທຸກວັນນີ້, ສິ່ງທີ່ດາວິດໄດ້ຕັ້ງຂໍ້ນີ້ໃຫ້ເປັນກົດ
ແລະຫລັກປະຕິບັດສຳລັບຄົນອິດສະຣາເອນ.
[26]ເມື່ອດາວິດໄດ້ມາເຖິງຊິກລັກ, ລາວກໍໄດ້ສົ່ງສິ່ງຂອງທີ່ໄດ້ນັ້ນສ່ວນຫນຶ່ງໄປໃຫ້ພວກຜູ້ອາວຸໂສຂອງຢູດາ, ແລະໃຫ້ແກ່ພວກເພື່ອນຂອງລາວ,
ກ່າວວ່າ, "ເບິ່ງແມ້,
ນີ້ເປັນສິ່ງຂອງສຳລັບພວກທ່ານຈາກສິ່ງຂອງທີ່ຍຶດມາຈາກພວກສັດຕູຂອງພຣະຢາເວ."[27]ລາວໄດ້ສົ່ງບາງສ່ວນໃຫ້ແກ່ຜູ້ອາວຸໂສທັງຫລາຍທີ່ໄດ້ຢູ່ໃນເບທູເອນ,
ແລະຄົນເຫລົ່ານັ້ນທີ່ໄດ້ຢູ່ໃນຣາໂມດຕອນໃຕ້, ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນຢາຕີ,[28]ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນອາໂຣເອ,
ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນສິບໂມນ, ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນເອເທໂມອາ.


generated on Tue Jun 17 19:01:42 2025

29ລາວໄດ້ສົ່ງບາງສ່ວນໃຫ້ແກ່ພວກຜູ້ອາວຸໂສທີ່ໄດ້ຢູ່ໃນຣາຄານ, ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ຢູ່ໃນບັນດາເມືອງຂອງຄົນເຢຣາເມເອນ,
ແລະໃຫ້ແກ່ຄົນເຫລົ່ານັ້ນຜູ້ທີ່ໄດ້ຢູ່ໃນບັນດາເມືອງຂອງຄົນເຄໄນ້,
30ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນໂຮເຣມາ,
ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນໂບຣາຊານ, ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນອາທາດ,
31ແລະໃຫ້ແກ່ຄົນເຫລົ່ານັ້ນທີ່ໄດ້ຢູ່ໃນເຮັບໂຣນ,
ແລະໃຫ້ແກ່ທຸກຄົນບ່ອນທີ່ດາວິດເອງກັບພວກເຂົາໄດ້ເຄີຍໄປ.


generated on Tue Jun 17 19:01:42 2025

## 31

1ບັດນີ້ຄົນຟີລິດສະຕິນໄດ້ຕໍ່ສູ້ກັບຄົນອິດສະຣາເອນ. ແລະຄົນອິດສະຣາເອນກໍໄດ້ຫນີຕໍ່ຫນ້າຄົນຟີລິດສະຕິນ
ແລະໄດ້ຫລົ້ມຕາຍຢູ່ເທິງພູເຂົາກີໂບອາ.2ຄົນຟີລິດສະຕິນກໍໄດ້ໄລ່ທັນໂຊນແລະພວກລູກຊາຍຂອງພະອົງ.
ຄົນຟີລິດສະຕິນກໍໄດ້ຂ້າບັນດາລູກຊາຍຂອງໂຊນຄືໂຢນາທານ, ອາບີນາດາບ, ແລະມັກຄີຊູວາ.3ການສູ້ຮົບກໍຫນັກຫນ່ວງຕໍ່ໂຊນ,
ແລະພວກນັກແມ້ນທະນູກໍໄດ້ໂຈມຕີໂຊນຢ່າງກະທັນຫັນ. ພະອົງໄດ້ຮັບບາດເຈັບສາຫັດເພາະພວກເຂົາ.

4ແລ້ວໂຊນໄດ້ເວົ້າກັບຄົນຖືອາວຸດຂອງພະອົງວ່າ, "ຈົ່ງຊັກດາບຂອງເຈົ້າອອກ ແລະແທງເຮົາເສຍໃຫ້ທະລຸ. ບໍດັ່ງນັ້ນ,
ຢ້ານວ່າພວກທີ່ບໍ່ໄດ້ເຂົ້າພິທີຕັດເຫລົ່ານີ້ຈະມາ ແລະ ເຮັດປ່າເຖື່ອນຕໍ່ເຮົາ." ແຕ່ຜູ້ຖືອາວຸດຂອງພະອົງບໍ່ໄດ້ເຮັດຕາມ, ເພາະລາວຢ້ານກົວຫລາຍ.
ດັ່ງນັ້ນ ໂຊນຈຶ່ງໄດ້ຈັບດາບຂອງພະອົງຂຶ້ນມາແລະຫລົ້ມທັບດາບນັ້ນ.5ເມື່ອຜູ້ຖືອາວຸດຂອງພະອົງໄດ້ເຫັນວ່າໂຊນຕາຍແລ້ວ,
ລາວກໍໄດ້ຫລົ້ມທັບດາບຂອງລາວຕາຍຄືກັນກັບພະອົງ.6ດັ່ງນັ້ນ ໂຊນກໍໄດ້ຕາຍ, ລູກຊາຍສາມຄົນຂອງພະອົງ, ແລະຜູ້ຖືອາວຸດຂອງພະອົງ—
ລວມທັງຄົນເຫລົ່ານີ້ທັງຫມົດ ກໍໄດ້ຕາຍໃນວັນດຽວກັນນັ້ນເອງ.
7ເມື່ອປະຊາຊົນອິດສະຣາເອນ ຊຶ່ງຢູ່ອີກຟາກຫນຶ່ງຂອງພູເຂົາ, ແລະຄົນເຫລົ່ານັ້ນທີ່ຢູ່ຝັ່ງກົງກັນຂ້າມຂອງແມ່ນ້ຳຢໍແດນ,
ໄດ້ເຫັນວ່າພວກຄົນອິດສະຣາເອນໄດ້ຫນີໄປ, ແລະໄດ້ເຫັນວ່າໂຊນກັບລູກຊາຍຂອງພະອົງໄດ້ຕາຍໄປແລ້ວ,
ພວກເຂົາກໍໄດ້ປະຖິ້ມບັນດາເມືອງຕ່າງໆ ແລະໄດ້ຫນີໄປ, ແລະຄົນຟີລິດສະຕິນໄດ້ເຂົ້າມາ ແລະໄດ້ອາໄສຢູ່ໃນເມືອງເຫລົ່ານັ້ນ.
8ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນໃນວັນຕໍ່ມາ, ເມື່ອຄົນຟີລິດສະຕິນໄດ້ມາປົດສິ່ງຂອງຈາກຄົນທີ່ຖືກຂ້າຕາຍ,
ກໍໄດ້ພົບສົບຂອງໂຊນແລະລູກຊາຍທັງສາມຄົນຢູ່ເທິງພູເຂົາກີໂບອາ.
9ພວກເຂົາຈຶ່ງໄດ້ຕັດຫົວຂອງໂຊນ ແລະໄດ້ແກ້ເຄື່ອງອາວຸດຂອງພະອົງອອກ ແລະໄດ້ສົ່ງຜູ້ແຈ້ງຂ່າວໄປທົ່ວແຜ່ນດິນຟີລິດສະຕິນ
ແລະໄດ້ແຈ້ງຂ່າວໄປຍັງວິຫານຮູບເຄົາລົບຂອງພວກເຂົາ ແລະໄປຍັງປະຊາຊົນດ້ວຍ.
10ພວກເຂົາໄດ້ເອົາເຄື່ອງອາວຸດຂອງພະອົງໄປໄວ້ໃນວິຫານຂອງພະອັດໂທເລັດ, ແລະພວກເຂົາໄດ້ມັດສົບຂອງພະອົງໄວ້ກັບກຳແພງເມືອງເບຊານ.
11ເມື່ອຄົນທີ່ອາໄສຢູ່ທີ່ເມືອຢາເບດກີເລອາດໄດ້ຍິນວ່າຄົນຟີລິດສະຕິນເຮັດຢ່າງນັ້ນກັບໂຊນ,12ຜູ້ຊາຍທີ່ເປັນນັກຮົບທຸກຄົນກໍໄດ້ລຸກຂຶ້ນ
ແລະເດີນທາງຕະຫລອດຄືນ ແລະໄດ້ປົດສົບຂອງໂຊນ ແລະສົບຂອງລູກຊາຍທັງສາມຈາກກຳແພງເມືອງບາຊານ.
ພວກເຂົາໄດ້ນຳມາທີ່ເມືອງຢາເບດ ແລະໄດ້ເຜົາສົບຢູ່ທີ່ນັ້ນ.13ແລ້ວພວກເຂົາໄດ້ເກັບກະດູກ ແລະໄດ້ໄປຝັງສົບຂອງໂຊນ
ແລະລູກຊາຍຂອງພະອົງໄວ້ທີ່ກ້ອງຕົ້ນສົນຫນອກໃນຢາເບດ, ແລະໄດ້ອົດອາຫານເປັນເວລາເຈັດວັນ.

# 2 ຊາມູເອນ

## 1

1ຫລັງຈາກການຕາຍຂອງກະສັດໂຊນແລ້ວ, ດາວິດກໍໄດ້ກັບມາຈາກການໂຈມຕີຄົນອາມາເຫລັກ ແລະໄດ້ພັກຢູ່ທີ່ຊິກລັກໄດ້ສອງວັນ.2ວັນທີ
ສາມ, ຊາຍຄົນຫນຶ່ງໄດ້ມາຈາກຄ້າຍຂອງກະສັດໂຊນໃສ່ເສື້ອຜ້າຂາດ ແລະ ມີດິນເປື້ອນທີ່ຫົວຂອງຂົາ. ເມື່ອເຂົາໄດ້ມາຮອດດາວິດ ກໍໄດ້
ຫມອບຫນ້າລົງຮອດພື້ນດິນ ແລະ ໄດ້ຫມົດແຮງຢູ່ບ່ອນນັ້ນ.

3ດາວິດໄດ້ຖາມເຂົາວ່າ, "ເຈົ້າມາຈາກໃສ?" ເຂົາໄດ້ຕອບວ່າ, "ຂ້າພະເຈົ້າມາຈາກຄ້າຍຂອງອິດສະຣາເອນ."4ດາວິດໄດ້ຖາມເຂົາວ່າ, "ຂໍບອກ
ຂ້ອຍວ່າ ເຫດຜົນເປັນແນວໃດແນ່." ເຂົາໄດ້ຕອບວ່າ, "ພວກປະຊາຊົນໄດ້ຫນີຈາກການສູ້ຮົບ. ມີຫລາຍຄົນໄດ້ລົ້ມລົງ ແລະ ມີຫລາຍຄົນໄດ້
ຕາຍແລ້ວ. ກະສັດໂຊນ ແລະ ໂຢນາທານລູກຊາຍຂອງເພິ່ນກໍຕາຍເຊັ່ນກັນ."5ດາວິດຈຶ່ງໄດ້ຖາມຊາຍຫນຸ່ມຄົນນັ້ນວ່າ, "ເຈົ້າຮູ້ໄດ້ຢ່າງໃດວ່າໂຊນ
ແລະ ໂຢນາທານລູກຂອງເພິ່ນໄດ້ຕາຍແລ້ວ?"
6ຊາຍຫນຸ່ມນັ້ນໄດ້ຕອບວ່າ, "ບັງເອີນທີ່ຂ້ານ້ອຍມາທີ່ພູເຂົາກິນໂບອາ, ແລະ ທີ່ນັ້ນກະສັດໂຊນໄດ້ຊົງຢືນຄຳຫອກຂອງຕົນຢູ່, ແລະ ລົດມ້າ ແລະ
ຄົນຂີ່ທັງຫລາຍກໍກຳລັງມາໃກ້ເພິ່ນ.7ກະສັດໂຊນໄດ້ຫລຽວມາ ແລະ ເລີຍເຫັນຂ້ານ້ອຍ ແລະ ກໍໄດ້ເອີ້ນຂ້ານ້ອຍ. ຂ້ານ້ອຍໄດ້ຕອບວ່າ, "ຂ້າ
ນ້ອຍຢູ່ທີ່ນີ້."
8ເພິ່ນໄດ້ຖາມຂ້ານ້ອຍວ່າ, "ເຈົ້າແມ່ນໃຜ?" ຂ້ານ້ອຍຕອບວ່າ, ຂ້ານ້ອຍເປັນຄົນອາມາເຫລັກ."9ເພິ່ນກໍໄດ້ບອກຂ້ານ້ອຍວ່າ, "ຈົ່ງມາຢືນເຫນືອ
ເຮົາ ແລະ ຂ້າເຮົາສະ, ເພາະເຮົາກຳລັງເຈັບປວດຢ່າງແສນສາຫັດ, ແຕ່ເຮົາຍັງມີຊີວິດຢູ່."10ຂ້ານ້ອຍຈຶ່ງໄດ້ໄປຢືນເຫນືອເພິ່ນ ແລະ ໄດ້ຂ້າເພິ່ນ
ເລີຍ, ເພາະຂ້ານ້ອຍຮູ້ວ່າເພິ່ນຈະບໍ່ສາມາດດຳລົງຊີວິດຢູ່ໄດ້ອີກຫລັງຈາກທີ່ເພິ່ນໄດ້ລົ້ມໄປ. ແລ້ວເພິ່ນກໍໄດ້ຖອດມົງກຸດຢູ່ຫົວຂອງເພິ່ນ ແລະ ປະ
ລັກແຂນຂອງເພິ່ນ ແລະ ໄດ້ນຳສິ່ງເຫລົ່ານັ້ນມາໃຫ້ທ່ານ, ເຈົ້ານາຍຂອງຂ້ານ້ອຍ."
11ແລ້ວດາວິດໄດ້ຈີກເສື້ອຂອງເຂົາ, ແລະຄົນທັງປວງທີ່ຢູ່ກັບເຂົາກໍໄດ້ເຮັດຄືກັນ.12ພວກເຂົາໄດ້ຄຳຄວນຫາ, ຮ້ອງໄຫ້ ແລະ ໄດ້ອົດອາຫານຈົນ
ຮອດແລງ, ເພື່ອໂຊນ, ເພື່ອໂຢນາທານລູກຊາຍຂອງເພິ່ນ, ແລະ ເພື່ອປະຊາຊົນຂອງພຣະເຈົ້າຢາເວ, ແລະ ເພື່ອເຊື້ອສາຍອິດສະຣາເອນ ເພາະ
ວ່າພວກເຂົາໄດ້ລົ້ມຕາຍດ້ວຍດາບ.13ດາວິດໄດ້ຖາມຊາຍຫນຸ່ມວ່າ," ເຈົ້າມາຈາກໃສ?" ເຂົາໄດ້ຕອບວ່າ, "ຂ້ານ້ອຍເປັນລູກຊາຍຂອງຄົນຕ່າງ
ດ້າວໃນດິນແດນ, ຂອງຄົນອາມາເຫລັກ."
14ດາວິດໄດ້ຖາມເຂົາວ່າ, "ເປັນຫຍັງເຈົ້າບໍ່ຢ້ານກົວທີ່ຈະຂ້າກະສັດຜູ້ທີ່ພຣະຢາເວໄດ້ຊົງເຈີມແລ້ວນັ້ນດ້ວຍມືຂອງເຈົ້າເອງ?"15ດາວິດກໍໄດ້ເອີ້ນ
ຊາຍຄົນຫນຶ່ງ ແລະ ໄດ້ເວົ້າວ່າ, "ຈົ່ງໄປ ແລະ ຂ້າເຂົາເສຍ." ແລ້ວຜູ້ຊາຍຄົນນັ້ນກໍໄດ້ໄປ ແລະ ໄດ້ຂ້າເຂົາ, ແລະ ຄົນອາມາເຫລັກນັ້ນກໍຕາຍ.
16ແລ້ວດາວິດໄດ້ກ່າວແກ່ສົບຂອງຄົນອາມາເຫລັກວ່າ, "ເລືອດຂອງເຈົ້າກໍຕົກຢູ່ຫົວຂອງເຈົ້າ ເພາະວ່າປາກຂອງເຈົ້າໄດ້ເປັນພະຍານປັກປຳໂຕ
ເຈົ້າ ແລະ ໄດ້ເວົ້າວ່າ, "ຂ້ານ້ອຍໄດ້ຂ້າກະສັດຜູ້ທີ່ພຣະຢາເວໄດ້ຊົງເຈີມໄວ້.""
17ແລ້ວດາວິດກໍໄດ້ຮ້ອງເພງໄວ້ອາໄລໃຫ້ກະສັດໂຊນ ແລະ ໂຢນາທານລູກຂອງເພິ່ນ.18ເຂົາໄດ້ອອກຄຳສັ່ງໃຫ້ປະຊາຊົນສອນເພງໄວ້ອາໄລນີ້ໃຫ້
ແກ່ເຊື້ອຊາດຢູດາ, ຊຶ່ງໄດ້ບັນທຶກໄວ້ໃນຫນັງສືຂອງຢາຊາ.19" ສັກສີຂອງທ່ານອິດສະຣາເອນເອີຍ, ໄດ້ຖືກຂ້າເສີຍແລ້ວ! ຢູ່ທີ່ສູງຂອງທ່ານວິລະບູ


generated on Tue Jun 17 19:01:42 2025

ລຸດລົ້ມລົງໄດ້ຢ່າງໃດ![20]ຢ່າບອກເລື່ອງນີ້ໃນເມືອງກັດ, ຢ່າປະກາດເລື່ອງນີ້, ໃນຫົນທາງເມືອງອາຊະເກໂລນ, ເພາະເຫດວ່າພວກບຸດສາວຂອງຄົນ
ຟີລິດສະຕີນຈະບໍ່ປິຕິຍິນດີ, ເພາະພວກລູກສາວຂອງພວກເຂົາບໍ່ໄດ້ບໍ່ໄດ້ຮັບພິທີຕັດ,ຈະບໍ່ສະເຫລີມສະຫລອງ.
[21]ເທິງພູກິນໂບອາເອີຍ, ຂໍຢ່າມີນ້ຳຄ້າງ ຫລືນ້ຳຝົນເທິງເຈົ້າ, ຢ່າໃຫ້ທົ່ງນາອອກຮວງ, ເພາະວ່າທີ່ນັ້ນໂລ່ຂອງວິລະບູລຸດໄດ້ມີມົນທິນແລ້ວ, ໂລ່ຂອງ
ໂຊນບໍ່ໄດ້ຖືກເຈີມດ້ວຍນ້ຳມັນອີກຕໍ່ໄປ.[22]ຈາກເລືອດຂອງຄົນເຫລົ່ານັ້ນໄດ້ຖືກຂ້າ, ຈາກຮ່າງກາຍຂອງນັກຮົບ, ຄັນທະນູຂອງໂຢນາທານບໍ່ໄດ້ຫັນ
ກັບມາ, ແລະ ດາບຂອງກະສັດໂຊນກໍບໍ່ໄດ້ກັບມາວ່າງເປົ່າ.
[23]ໂຊນ ແລະ ໂຢນາທານໄດ້ເປັນທີ່ຮັກ ແລະ ຫນ້າຍິນດີໃນຊີວິດ, ແລະ ໃນຄວາມຕາຍຂອງພວກເຂົາ ພວກເຂົາຈະບໍ່ແຍກຈາກກັນ. ພວກເຂົາ
ວ່ອງໄວກວ່າອິນຊີທັງຫລາຍ, ພວກເຂົາກໍແຂງແຮງກວ່າສິງໂຕທັງຝູງ.[24]ລູກສາວຂອງອິດສະຣາເອນເອີຍ, ຈົ່ງຮ້ອງໄຫ້ເພື່ອກະສັດໂຊນ, ຜູ້ຊຶ່ງປະ
ດັບພວກເຈົ້າຢ່າງອຶ່ງອາດດ້ວຍຜ້າສີແດງເຂັ້ມ ເຊັ່ນດຽວກັບເພັດພອຍນາໆຊະຫນິດ, ແລະ ຊຶ່ງປະດັບທອງຄຳເທິງເຄື່ອງແຕ່ງກາຍຂອງພວກເຈົ້າ.
[25]ວິລະບູລຸດໄດ້ລົ້ມລົງແລ້ວໃນທ່າມກາງສົງຄາມ! ໂຢນາທານກໍໄດ້ຖືກສັງຫານຢູ່ເທິງເນີນພູຂອງທ່ານ.[26]ໂຢນາທານອ້າຍຂອງຂ້ອຍເອີຍ, ຂ້ອຍເປັນ
ທຸກເພື່ອທ່ານ, ທ່ານເປັນທີ່ຊື່ນໃຈຂອງຂ້ອຍຫລາຍ. ຄວາມຮັກຂອງທ່ານມີຕໍ່ຂ້ອຍນັ້ນກໍອັດສະຈັນ, ເຫນືອກວ່າຄວາມຮັກໃດໆທີ່ມີຕໍ່ສະຕຣີ.[27]ວິ
ລະບູລຸດລົ້ມລົງໄດ້ຢ່າງໃດ, ແລະ ອາວຸດສົງຄາມກໍໃຊ້ການບໍ່ໄດ້ອີກແລ້ວ!"

 generated on Tue Jun 17 19:01:42 2025

2 1ຫລັງຈາກເຫດການນີ້ ດາວິດໄດ້ຖາມພຣະຢາເວ ແລະ ໄດ້ກ່າວວ່າ, "ຂ້ານ້ອຍຄວນຂຶ້ນໄປຍັງເມືອງຫນຶ່ງໃນຈຳນວນເມືອງຕ່າງໆຂອງຢູດາ
ຫລືບໍ່?" ພຣະຢາເວໄດ້ຕອບເຂົາວ່າ, "ຈົ່ງຂຶ້ນໄປເຖີດ." ດາວິດໄດ້ເວົ້າວ່າ, "ຂ້ານ້ອຍຄວນຂຶ້ນໄປຢູ່ໃສ?" ພຣະຢາເວກ່າວວ່າ, "ທີ່ເມືອງເຮັບ
ໂຣນ."2ດັ່ງນັ້ນດາວິດຈຶ່ງໄດ້ຂຶ້ນໄປທີ່ນັ້ນພ້ອມກັບເມຍທັງສອງຂອງເຂົາ, ຄືວ່າອາຮີໂນອາມຊາວຢິດຊະເຣນ, ແລະ ອາບີກາຍເມຍຫມ້າຍຂອງ
ນາບານຊາວກາເມນ.3ດາວິດກໍໄດ້ນຳຄົນທີ່ຢູ່ນຳເຂົາຂຶ້ນໄປທຸກຄົນ, ຊຶ່ງແຕ່ລະຄົນກໍໄດ້ພາຄອບຄົວໄປນຳ, ໄປຍັງເມືອງຕ່າງໆ ຂອງເຮັບໂຣນ,
ໃນສະຖານທີ່ຊຶ່ງພວກເຂົາໄດ້ເລີ່ມອາໄສຢູ່.

4ແລ້ວຜູ້ຄົນຈາກຢູດາກໍໄດ້ມາ ແລະ ໄດ້ເຈີມດາວິດໃຫ້ເປັນກະສັດເຫນືອເຊື້ອຊາດຂອງຢູດາ. ພວກເຂົາໄດ້ມາບອກດາວິດວ່າ, "ຊາວຢາເບັດກີ
ເລອາດໄດ້ເປັນຜູ້ຝັງຊາກສົບຂອງໂຊນ."5ດັ່ງນັ້ນດາວິດໄດ້ສົ່ງພວກສົ່ງສານໄປຫາຊາວຢາເບັດກີເລອາດນັ້ນ ໄດ້ບອກກັບພວກເຂົາວ່າ, "ຂໍພວກ
ທ່ານຮັບພຣະພອນຈາກພຣະຢາເວ, ທີ່ທ່ານສະແດງຄວາມຈົງຮັກພັກດີຕໍ່ໂຊນເຈົ້ານາຍຂອງພວກທ່ານ ແລະ ໄດ້ຝັງສົບຂອງເພິ່ນ.
6ບັດນີ້ຂໍພຣະຢາເວຊົງສຳແດງຄວາມຮັກອັນຫມັ້ນຄົງ ແລະ ຄວາມຊື່ສັດຕໍ່ພວກທ່ານ. ເຮົາຈະເຮັດຄວາມດີນີ້ຕໍ່ພວກທ່ານເພາະສິ່ງນີ້ທີ່ທ່ານໄດ້
ເຮັດ.7ບັດນີ້, ເພາະສະນັ້ນ ຂໍໃຫ້ມືຂອງພວກທ່ານເຂັ້ມແຂງ; ແລະ ຂໍໃຫ້ພວກທ່ານກ້າຫານເຖີດ ເພາະວ່າໂຊນເຈົ້ານາຍຂອງພວກທ່ານໄດ້
ຕາຍໄປແລ້ວ, ແລະ ປະຊາຊົນຢູດາກໍໄດ້ເຈີມຕັ້ງເຮົາໄວ້ເປັນກະສັດຂອງພວກເຂົາແລ້ວ."
8ແຕ່ອັບເນລູກຊາຍຂອງເນຣະ, ຜູ້ບັນຊາການກອງທັບຂອງກະສັດໂຊນ, ກໍໄດ້ພາອີຊະໂບເຊັດລູກຊາຍຂອງກະສັດໂຊນ ແລະ ໄດ້ນຳໄປທີ່ເມືອງ
ມະຫານາອີມ.9ເຂົາໄດ້ສະຖາປະນາອີຊະໂບເຊັດ ໃຫ້ເປັນກະສັດປົກຄອງເຂດແດນກີເລອາດ, ອາເຊ, ຢິດຊະເຣນ, ຄົນເອຟຣາອິມ, ຄົນເບັນຢາ
ມິນ, ແລະ ຄົນອິດສະຣາເອນທັງຫມົດ.
10ເມື່ອອີຊະໂບເຊັດລູກຂອງໂຊນ, ໄດ້ເລີ່ມປົກຄອງຊົນຊາດອິດສະຣາເອນນັ້ນ, ມີອາຍຸສີ່ສິບປີ, ແລະ ໄດ້ຊົງປົກຄອງດິນແດນຢູ່ສອງປີ. ແຕ່
ເຊື້ອສາຍຂອງຢູດາໄດ້ຕິດຕາມດາວິດ.11ເວລາທີ່ດາວິດຊົງເປັນກະສັດປົກຄອງເຊື້ອສາຍຂອງຢູດາໃນເຮັບໂຣນນັ້ນເປັນເວລາເຈັດປີກັບຫົກເດືອນ.
12ອັບເນລູກຂອງເນຣະ, ແລະ ທະຫານອີຊະໂບເຊັດລູກຊາຍຂອງໂຊນ, ໄດ້ອອກຈາກເມືອງມະຫານາອີມໄປຍັງເມືອງກີເບໂອນ.13ໂຢອາບລູກຊາຍ
ຂອງນາງເຊຣູອີຢາ ແລະທະຫານຂອງດາວິດ ໄດ້ອອກໄປພົບກັບພວກເຂົາທີ່ເມືອງກີເບໂອນ. ພວກເຂົາໄດ້ນັ່ງທີ່ຂອບສະນ້ຳ, ພວກຫນຶ່ງຢູ່ຝັ່ງ
ຫນຶ່ງຂອງສະ ແລະອີກພວກຫນຶ່ງກໍຢູ່ອີກດ້ານຫນຶ່ງ.
14ອັບເນຈຶ່ງໄດ້ເວົ້າກັບໂຢອາບວ່າ, "ຂໍໃຫ້ຄົນຫນຸ່ມລຸກຂຶ້ນ ແລະ ໄດ້ແຂ່ງຂັນກັນຕໍ່ຫນ້າພວກເຮົາເບິ່ງດູ. "ແລ້ວໂຢອາບກໍໄດ້ຕອບວ່າ, "ໃຫ້ພວກ
ເຂົາລຸກຂຶ້ນ."15ແລ້ວພວກຄົນຫນຸ່ມກໍໄດ້ລຸກຂຶ້ນ ແລະ ໄດ້ຮ່ວມກັນ, ສິບສອງຄົນສຳລັບຝ່າຍເບັນຢາມິນ ແລະຝ່າຍອີຊະໂບເຊັດລູກຂອງໂຊນ,
ແລະ ຝ່າຍພວກທະຫານສິບສອງຄົນຂອງດາວິດ.
16ແຕ່ລະຄົນຕ່າງກໍໄດ້ຈັບຫົວຂອງຄູ່ຕໍ່ສູ້ ແລະ ໄດ້ແທງດາບທີ່ຂ້າງຂອງຄູ່ຕໍ່ສູ້, ແລະພວກເຂົາຕ່າງກໍໄດ້ລົ້ມລົງດ້ວຍກັນ. ດັ່ງນັ້ນເຂົາຈຶ່ງເອີ້ນທີ່ນັ້ນ
ເປັນພາສາຮີບບຣູວ່າ, "ທົ່ງດາບ" ຫລື "ສະຫນາມແຫ່ງດາບ," ຊຶ່ງຢູ່ໃນກີເບໂອນ.17ການສູ້ຮົບໃນວັນນັ້ນດຸເດືອດຫລາຍ ແລະ ອັບເນ ແລະ
ພວກຄົນອິດສະຣາເອນກໍພ່າຍແພ້ທະຫານຂອງຝ່າຍດາວິດ.
18ລູກຊາຍທັງສາມຂອງນາງເຊຣູອີຢາກໍໄດ້ຢູ່ທີ່ນັ້ນຄື: ໂຢອາບ, ແລະ ອາບີໄຊ, ແລະ ອາສາເຮນ. ອາສາເຮນຜູ້ແລ່ນໄວເຫມືອນຟານປ່າ.19ອາສາ
ເຮນໄດ້ໄລ່ຕາມອັບເນຢ່າງບໍ່ລົດລະ ແລະ ໄດ້ນຳເຂົາໄປໂດຍບໍ່ໄດ້ລ້ຽວໄປທາງໃດເລີຍ.
20ອັບເນໄດ້ຫລຽວຫລັງມາ ແລະ ໄດ້ເວົ້າວ່າ," ນັ້ນແມ່ນອາສາເຮນບໍ?" ເຂົາໄດ້ຕອບວ່າ, "ແມ່ນແລ້ວ."21ອັບເນຈຶ່ງໄດ້ບອກເຂົາວ່າ, "ຈົ່ງລ້ຽວໄປ
ທາງຂວາຂອງເຈົ້າ ຫລືທາງຊ້າຍຂອງເຈົ້າ, ແລະ ຈັບເອົາຄົນຫນຸ່ມຄົນຫນຶ່ງແລ້ວກໍຮິບເອົາອາວຸດຂອງເຂົາໄປ." ແຕ່ອາສາເຮນບໍ່ຍອມຢຸດຈາກ
ການໄລ່ຕາມ.
22ດັ່ງນັ້ນອັບເນຈຶ່ງໄດ້ບອກອາສາເຮນອີກເທື່ອຫນຶ່ງວ່າ, "ຈົ່ງຢຸດໄລ່ນຳຂ້ອຍສາ. ຈະໃຫ້ຂ້ອຍຟາດເຈົ້າລົງດິນເຮັດຫຍັງ? ແລ້ວຂ້ອຍຈະເງີຍຫນ້າ
ເບິ່ງໂຢອາບ, ພີ່ນ້ອງຂອງເຈົ້າໄດ້ແນວໃດ?"23ແຕ່ອາສາເຮນບໍ່ຢຸດໄລ່, ແລະ ດັ່ງນັ້ນ ອັບເນກໍໄດ້ແທງເຂົາໂຕດ້ວຍດ້າມຫອກຂອງເຂົາ, ດັ່ງນັ້ນ ຫອ
ກກໍທະລຸອອກອີກດ້ານຫນຶ່ງ. ອາສາເຮນກໍໄດ້ລົ້ມລົງຕາຍຢູ່ທີ່ນັ້ນ. ດັ່ງນັ້ນ ເລື່ອງນີ້ກໍໄດ້ເກີດຂຶ້ນ ທີ່ໃຜກໍຕາມທີ່ມາເຖິງສະຖານທີ່ແຫ່ງນັ້ນທີ່ອາສາ
ເຮນລົ້ມລົງ ແລະ ຕາຍ, ເຂົາຈະຢຸດຢູ່ບ່ອນນັ້ນ ແລະ ກໍຢືນຢູ່ຊື່ໆ.
24ແຕ່ໂຢອາບກັບອາບີໄຊກໍໄດ້ໄລ່ຕິດຕາມອັບເນໄປ. ເມື່ອດວງຕາເວັນກຳລັງຈະຕົກ, ພວກເຂົາທັງສອງໄດ້ມາຮອດເນີນພູອຳມາ, ຊຶ່ງໃກ້ກີອາ ຕາມ
ທາງຖິ່ນແຫ້ງແລ້ງທຸລະກັນດານເມືອງກີເບໂອນ.25ຄົນເບັນຢາມິນກໍໄດ້ລວມຕົວກັນຫລັງອັບເນ ແລະ ໄດ້ຢືນຢູ່ເທິງຍອດຂອງເນີນພູ.
26ແລ້ວອັບເນໄດ້ຮ້ອງຖາມໂຢອາບ ແລະໄດ້ກ່າວວ່າ, "ຈະໃຫ້ດາບທຳລາຍທ່ານຕະຫລອດໄປບໍ? ອີກດົນປານໃດທ່ານຈຶ່ງຈະສັ່ງພວກທະຫານໃຫ້
ຫັນກັບຈາກການໄລ່ຕາມພີ່ນ້ອງຂອງພວກເຂົາ?"27ໂຢອາບຈຶ່ງໄດ້ຕອບວ່າ," ພຣະເຈົ້າຊົງພຣະຊົນຢູ່ສັນໃດ, ຖ້າທ່ານບໍ່ເວົ້າຂຶ້ນ, ພວກທະຫານກໍ
ຈະໄລ່ຕາມພວກພີ່ນ້ອງຂອງເຂົາຈົນຮອດມື້ອື່ນເຊົ້າ!"
28ດັ່ງນັ້ນ ໂຢອາບຈຶ່ງໄດ້ເປົ່າແກ, ແລະພວກທະຫານທັງປວງກໍໄດ້ຢຸດ ແລະ ບໍ່ໄດ້ໄລ່ຕິດຕາມອິດສະຣາເອນອີກ, ແລະ ບໍ່ໄດ້ສູ້ຮົບກັນອີກຕໍ່ໄປ29ອັບ
ເນ ແລະ ຄົນຂອງເຂົາກໍໄດ້ເດີນທາງຕະຫລອດກາງຄືນຜ່ານອາຣາບາ. ພວກເຂົາໄດ້ຂ້າມແມ່ນ້ຳຈໍແດນ, ໄດ້ເດີນທັບຕະຫລອດຊ່ວງເຊົ້າ ແລະກໍ
ໄດ້ມາຮອດມາຫານາອີມ.
30ໂຢອາບກໍໄດ້ກັບມາຈາກການໄລ່ຕິດຕາມອັບເນ. ເຂົາໄດ້ລວບລວມທະຫານທັງຫມົດຂອງເຂົາ, ທີ່ຂາດຫາຍໄປຄື ອາສາເຮນ ແລະ ທະຫານ
ຂອງດາວິດສິບເກົ້າຄົນ.31ແຕ່ຄົນຂອງດາວິດໄດ້ຂ້າຄົນເບັນຢາມິນ ແລະຄົນຂອງອັບເນຕາຍໄປສາມລ້ອຍຫົກສິບຄົນ.
32ແລ້ວພວກເຂົາກໍໄດ້ນຳເອົາຊາກສົບຂອງອາສາເຮນໄປຝັງຢູ່ໃນອຸບມຸງພໍ່ຂອງເຂົາ, ຊຶ່ງຢູ່ເມືອງເບັດເລເຮັມ. ໂຢອາບ ແລະ ພວກຄົນຂອງເຂົາກໍ
ໄດ້ເດີນທາງຕະຫລອດຄືນ, ແລະໃນ ຕອນເຊົ້າມືດກໍໄດ້ມາຮອດເມືອງເຮັບໂຣນ.

3 [1]ບັດນີ້ກໍໄດ້ມີສົງຄາມອັນຍາວນານລະຫວ່າງເຊື້ອສາຍຂອງໂຊນແລະເຊື້ອສາຍຂອງດາວິດ. ຝ່າຍດາວິດກໍໄດ້ເຂັ້ມແຂງຫລາຍຂຶ້ນ, ແຕ່ຝ່າຍ
ຂອງໂຊນໄດ້ອ່ອນກໍາລັງລົງເລື້ອຍໆ.

[2]ມີລູກຊາຍຫລາຍຄົນຂອງດາວິດໄດ້ເກີດທີ່ເມືອງເຮັບໂຣນ. ລູກຫົວປີຂອງເຂົາຄືອໍາໂນນ, ລູກຂອງອາຮີໂນອາມຊາວຢິດຊະເຣນ.
[3]ລູກຊາຍຜູ້ທີສອງຂອງເຂົາ, ກິເລອາບ, ຜູ້ທີ່ເປັນແມ່ແມ່ນນາງອາບີກາຍ, ແມ່ຫມ້າຍຂອງນາບານຈາກຄາເມລ. ແລະ ຜູ້ທີສາມຄື, ອັບຊາໂລມ,
ລູກຊາຍນາງມາອາກາ, ລູກສາວກະສັດຕານໄມ, ແຫ່ງເກຊູ.
[4]ລູກຊາຍຜູ້ທີສີ່ຂອງດາວິດ, ອາໂດນີຢາ, ຜູ້ເປັນລູກຊາຍຂອງນາງຮັກກິດ. ລູກຊາຍຄົນທີຫ້າຂອງເຂົາຄື ເຊຟາຕີຢາ, ຜູ້ທີ່ເປັນລູກຊາຍຂອງນາງ
ອາບີຕານ,[5]ແລະ ລູກຊາຍຄົນທີຫົກຄື, ອິດທະເລອາມ, ຜູ້ທີ່ເປັນລູກຊາຍຂອງນາງເອັກລາ ເມຍຂອງດາວິດ. ພວກລູກຊາຍເຫລົ່ານີ້ຂອງດາວິດໄດ້
ເກີດຢູ່ໃນເມືອງເຮັບໂຣນ.
[6]ສິ່ງນີ້ໄດ້ເກີດຂຶ້ນໃນຊ່ວງສົງຄາມລະຫວ່າງຝ່າຍຂອງໂຊນ ກັບຝ່າຍຂອງດາວິດ ທີ່ອັບເນໄດ້ເຮັດໂຕໃຫ້ເຂັ້ມແຂງຂຶ້ນໃນຝ່າຍກະສັດໂຊນ.
[7]ໂຊນໄດ້ມີເມຍນ້ອຍຄົນຫນຶ່ງຊື່ວ່ານາງຣິຊະປາ, ລູກສາວຂອງອາອີຢາ. ອິຊະໂບເຊັດລູກຊາຍຂອງກະສັດໂຊນຈຶ່ງໄດ້ກ່າວຫາອັບເນວ່າ, "ເປັນ
ຫຍັງຈຶ່ງໄດ້ເຂົ້າໄປນອນກັບເມຍນ້ອຍພໍ່ຂອງເຮົາ?
[8]ອັບເນໄດ້ໃຈຮ້າຍຫລາຍໃນຄໍາເວົ້າຂອງອິຊະໂບເຊັດ ແລະ ໄດ້ເວົ້າວ່າ," ຂ້ານ້ອຍເປັນຄົນຮັບໃຊ້ຢູດາຊັ້ນຫວາ? ທຸກມື້ນີ້ຂ້ານ້ອຍກໍາລັງສໍາແດງ
ຄວາມຈົງຮັກພັກດີຕໍ່ເຊື້ອສາຍຂອງໂຊນ, ພໍ່ຂອງທ່ານ, ແລະ ຕໍ່ພີ່ນ້ອງຂອງທ່ານ, ແລະ ຕໍ່ມິດສະຫາຍຂອງພໍ່ທ່ານ, ບໍ່ໄດ້ມອບທ່ານໄວ້ໃນມືຂອງ
ດາວິດ. ແຕ່ບັດນີ້ທ່ານຍັງກ່າວຫາຂ້ານ້ອຍດ້ວຍເລື່ອງຜູ້ຍິງຄົນນີ້ບໍ?
[9]ຂໍພຣະຢາເວຊົງລົງໂທດຂ້ານ້ອຍ, ຄື ອັບເນ, ແລະຂໍຊົງເພີ່ມໂທດນັ້ນດ້ວຍ, ຖ້າຂ້ານ້ອຍບໍ່ເຮັດເພື່ອດາວິດ ດັ່ງທີ່ພຣະຢາເວໄດ້ຊົງ
ສາບານແກ່ເຂົາວ່າ,[10]ຄືຍ້າຍຣາຊອານາຈັກຈາກເຊື້ອຊາດຂອງກະສັດໂຊນ ແລະ ສະຖາປານາບັນລັງຂອງດາວິດເຫນືອອິດສະຣາເອນ ແລະ
ເຫນືອຢູດາ, ຕັ້ງແຕ່ດານຮອດເບເອນເຊບາ."[11]ອິຊະໂບເຊັດກໍບໍ່ສາມາດຕອບກັບອັບເນໄດ້ແມ່ນແຕ່ຄໍາດຽວ, ເພາະພະອົງຊົງເກງຢ້ານເຂົາ.
[12]ແລ້ວອັບເນກໍໄດ້ສົ່ງພວກສົ່ງສານໄປຍັງດາວິດເພື່ອເວົ້າແທນໂຕເອງວ່າ, "ແຜ່ນດິນນີ້ເປັນຂອງໃຜ? ຂໍຊົງເຮັດພັນທະສັນຍາກັບຂ້າພະເຈົ້າ,
ແລະ ທ່ານຈະຊົງເຫັນວ່າມືຂອງຂ້າພະເຈົ້າຢູ່ຝ່າຍທ່ານ, ເພື່ອນໍາອິດສະຣາເອນທັງຫມົດມາຢູ່ຝ່າຍທ່ານ."[13]ດາວິດໄດ້ຕອບວ່າ, "ດີແລ້ວ, ເຮົາຈະ
ເຮັດພັນທະສັນຍາກັບເຈົ້າ. ແຕ່ມີສິ່ງຫນຶ່ງທີ່ເຮົາຈະໃຫ້ເຈົ້າເຮັດ ຄືວ່າ ເຈົ້າບໍ່ສາມາດມາພົບຫນ້າເຮົາໄດ້ ເວັ້ນແຕ່ວ່າເຈົ້າຈະນໍາມີການ,
ລູກສາວຂອງກະສັດໂຊນມາດ້ວຍ, ເມື່ອເຈົ້າຈະມາພົບເຮົາ."
[14]ແລ້ວດາວິດໄດ້ສົ່ງພວກສົ່ງສານໄປຍັງອິຊະໂບເຊັດ, ລູກຊາຍຂອງໂຊນກ່າວວ່າ, "ຈົ່ງມອບເມຍຂ້າພະເຈົ້າມີການ ໃຫ້ແກ່ເຮົາ, ຜູ້ຊຶ່ງຂ້າພະເຈົ້າ
ໄດ້ຫມັ້ນໄວ້ດ້ວຍຫນັງປາຍອົງຄະຊາດຂອງພວກຟີລິດ ຫນຶ່ງຮ້ອຍຄົນ."[15]ດັ່ງນັ້ນ ອິຊະໂບເຊັດຈຶ່ງໄດ້ສົ່ງຄົນໄປພາມີການແລະ ໄດ້ເອົານາງ ຈາກ
ຜົວຂອງນາງຄື, ປານຕີເອນ, ລູກຊາຍລາອິດ.[16]ຜົວຂອງລາວໄດ້ໄປກັບລາວ, ຮ້ອງໄຫ້ຕາມລາວໄປຈົນຮອດບາຮູຣິມ. ແຕ່ເມື່ອອັບເນບອກກັບລາວ
ວ່າ, "ຈົ່ງກັບໄປບ້ານດຽວນີ້ເລີຍ." ແລ້ວເຂົາກໍໄດ້ກັບໄປ.
[17]ອັບເນຈຶ່ງໄດ້ກ່າວກັບພວກຜູ້ອາວຸໂສຂອງອິດສະຣາເອນວ່າ, "ໃນອາດີດພວກທ່ານໄດ້ພະຍາຍາມໃຫ້ດາວິດເປັນກະສັດເຫນືອພວກທ່ານ.[18]ບັດ
ນີ້ຈົ່ງເຮັດດັ່ງນັ້ນ. ເພາະພຣະຢາເວໄດ້ກ່າວເຖິງດາວິດວ່າ, 'ດ້ວຍມືຂອງດາວິດຜູ້ຮັບໃຊ້ຂອງເຮົາ ເຮົາຈະຊ່ວຍກູ້ອິດສະຣາເອນປະຊາຊົນຂອງ
ເຮົາຈາກພວກຟີລິດສະຕິນ ແລະ ຈາກມືສັດຕູທັງຫມົດຂອງພວກເຂົາ.'"
[19]ອັບເນກໍໄດ້ເວົ້າເປັນສ່ວນໂຕກັບຄົນເບັນຢາມິນເຊັ່ນດຽວກັນ. ແລ້ວອັບເນກໍໄດ້ໄປບອກດາວິດທີ່ເມືອງເຮັບໂຣນດ້ວຍເຊັ່ນກັນ ເພື່ອອະທິບາຍເຖິງ
ທຸກສິ່ງທີ່ອິດສະຣາເອນ ແລະ ເຊື້ອສາຍທັງຫມົດຂອງເບັນຢາມິນໄດ້ຕົກລົງກັນທີ່ຈະດໍາເນີນການໃຫ້ສໍາເລັດ.[20]ເມື່ອອັບເນພ້ອມກັບຄົນຂອງເຂົາ
ຈໍານວນຊາວຄົນໄດ້ມາຮອດເຮັບໂຣນ ເພື່ອເຂົ້າເຝົ້າດາວິດ, ດາວິດໄດ້ຈັດຕຽມງານລ້ຽງສໍາລັບພວກເຂົາ.
[21]ອັບເນໄດ້ອະທິບາຍໃຫ້ດາວິດວ່າ, "ຂ້ານ້ອຍຈະລຸກຂຶ້ນ ແລະ ຈະລວມຄົນອິດສະຣາເອນທັງຫມົດມາຍັງທ່ານ, ກະສັດຜູ້ເປັນເຈົ້ານາຍຂອງຂ້າ
ນ້ອຍ, ດັ່ງນັ້ນເພື່ອທີ່ພວກເຂົາຈະເຮັດພັນທະສັນຍາກັບທ່ານ, ແລະ ເພື່ອທີ່ທ່ານຈະຊົງຄອບຄອງທຸກຢ່າງຕາມໃຈມັກຂອງທ່ານ." ດັ່ງນັ້ນດາວິດກໍ
ໄດ້ສົ່ງອັບເນກັບໄປ, ແລະ ອັບເນກໍໄດ້ຈາກໄປໂດຍສັນຕິ.
[22]ແລ້ວທະຫານຂອງດາວິດ ແລະ ໂຢອາບໄດ້ກັບມາຈາກການໄປປຸ້ນ ແລະ ໄດ້ນໍາສິ່ງຂອງທີ່ຍຶດໄດ້ຫລາຍມານໍາກັບພວກເຂົາ. ແຕ່ອັບເນບໍ່ໄດ້ຢູ່
ກັບດາວິດທີ່ເຮັບໂຣນແລ້ວ. ດາວິດໄດ້ສົ່ງເຂົາກັບໄປແລ້ວ, ແລະ ເຂົາກໍໄດ້ຈາກໄປໂດຍສັນຕິ.[23]ເມື່ອໂຢອາບກັບກອງທັບທັງຫລາຍທີ່ເຂົາໄດ້ມາ
ຮອດ, ພວກເຂົາໄດ້ບອກໂຢອາບວ່າ, "ອັບເນລູກຊາຍຂອງເນຣະໄດ້ມາເຝົ້າກະສັດ, ແລະ ເພິ່ນໄດ້ສົ່ງເຂົາກັບໄປ, ແລະ ອັບເນກໍໄດ້ກັບໄປໂດຍ
ສັນຕິ."
[24]ແລ້ວໂຢອາບກໍໄດ້ເຂົ້າໄປເຝົ້າກະສັດ ແລະ ໄດ້ບອກວ່າ,"ທ່ານຊົງເຮັດຫຍັງໄປແລ້ວ? ເບິ່ງສາ, ອັບເນໄດ້ມາເຂົ້າເຝົ້າທ່ານ! ເປັນຫຍັງທ່ານຈຶ່ງ
ໄດ້ສົ່ງເຂົາໄປແບບນີ້, ແລະ ເຂົາກໍໄດ້ຈາກໄປແລ້ວ?[25]ທ່ານບໍ່ຮູ້ບໍ່ວ່າອັບເນລູກຊາຍຂອງເນຣະ ໄດ້ມາເພື່ອລໍ້ລວງທ່ານ ແລະ ເພື່ອລ່ວງຮູ້ທຸກຢ່າງທີ່
ທ່ານກໍາລັງເຮັດ?"[26]ເມື່ອໂຢອາບໄດ້ເຝົ້າດາວິດແລ້ວໆ, ເຂົາໄດ້ສົ່ງຜູ້ສົ່ງສານນໍາອັບເນໄປ, ແລະ ພວກເຂົາກໍໄດ້ນໍາອັບເນກັບມາຈາກບໍ່ນໍ້າ
ສ້າງທີ່ຊີຣາ, ແຕ່ດາວິດບໍ່ໄດ້ຮູ້ເລື່ອງນີ້.
[27]ເມື່ອອັບເນໄດ້ກັບມາຮອດເຮັບໂຣນແລ້ວ, ໂຢອາບກໍໄດ້ນໍາເຂົາຫລົບເຂົ້າທາງປະຕູເມືອງເພື່ອຈະເວົ້າກັບເຂົາຕາມລໍາພັງ. ທີ່ນັ້ນເອງໂຢອາບໄດ້
ແທງທ້ອງເຂົາ ແລະ ຂ້າເຂົາຕາຍ, ໂຢອາບກໍແກ້ແຄ້ນເລືອດຂອງອາສາເຮນນ້ອງຊາຍຂອງເຂົາ.
[28]ເມື່ອດາວິດໄດ້ຮູ້ເລື່ອງນີ້ ທ່ານໄດ້ເວົ້າວ່າ, "ຕົວເຮົາ ແລະ ຣາຊາອານາຈັກຂອງເຮົາ ປາສະຈາກຄວາມຜິດສືບໄປເປັນນິດ ເພາະຕໍ່ຫນ້າພຣະຢາ
ເວດ້ວຍເລື່ອງໂລຫິດຂອງອັບເນລູກຊາຍຂອງເນຣະ.[29]ຂໍໃຫ້ຄວາມຜິດການຕາຍຂອງອັບເນຕົກເຫນືອຫົວຂອງໂຢອາບ ແລະ ເຫນືອເຊື້ອສາຍທັງ
ຫລາຍຂອງພໍ່ເຂົາ. ຂໍໃຫ້ການລົງໂທດຕົກຖືກຄອບຄົວຂອງໂຢອາບໃຫ້ຄົນມີບາດແຜ ຫລື ໂລກຜິວຫນັງ ຫລື ຄົນທີ່ພິການ ແລະ ຕ້ອງຍ່າງດ້ວຍ
ໄມ້ເທົ້າ ຫລື ຖືກຂ້າດ້ວຍຄົມດາບ ຫລື ຄົນຂາດອາຫານ."[30]ດັ່ງນັ້ນໂຢອາບ ແລະ ອາບີໄຊນ້ອງຊາຍຂອງເຂົາໄດ້ຂ້າອັບເນ, ເພາະອັບເນໄດ້ຂ້າອາ
ສາເຮນນ້ອງຊາຍຂອງພວກເຂົາໃນສະຫນາມຮົບທີ່ກີເບໂອນ.
[31]ດາວິດກໍໄດ້ເວົ້າກັບໂຢອາບ ແລະ ປະຊາຊົນທຸກຄົນທີ່ຢູ່ກັບທ່ານວ່າ, "ຈົ່ງຈີກເສື້ອຜ້າຂອງພວກທ່ານ, ເອົາຜ້າກະສອບມັດແອວໄວ້, ແລະ ຈົ່ງໄວ້
ທຸກຕໍ່ຫນ້າຮ່າງກາຍຂອງອັບເນ." ບັດນີ້ກະສັດດາວິດໄດ້ຍ່າງຕາມຂະບວນສົບໄປ.[32]ພວກເຂົາກໍໄດ້ຝັງສົບອັບເນໄວ້ທີ່ເຮັບໂຣນ. ກະສັດກໍໄດ້
ຮ້ອງໄຫ້ ແລະ ຊົງຮ້ອງສຽງດັງທີ່ອຸບໂມງຝັງສົບຂອງອັບເນ, ແລະ ປະຊາຊົນທັງປວງກໍໄດ້ຮ້ອງໄຫ້ເຊັ່ນດຽວກັນ.

[33]ກະສັດໄດ້ຄ່ຳຄວນຫາອັບເນ ແລະ ໄດ້ຮ້ອງເພງວ່າ, "ຄວນບໍ່ທີ່ອັບເນຈະຕາຍ ຄືຄົນເຂົາວ່າ? [34]ມືຂອງເຈົ້າກໍບໍ່ໄດ້ຖືກມັດ. ຕີນຂອງເຈົ້າກໍບໍ່ໄດ້ຕິດ
ໂສ້ຕວນ. ຄືຄົນລົ້ມລົງຕໍ່ຫນ້າເນາະ. ລູກຊາຍຂອງຄວາມບໍ່ຍຸດຕິທຳ, ດັ່ງນັ້ນເຈົ້າກໍໄດ້ລົ້ມລົງ." ອີກຄັ້ງຫນຶ່ງປະຊາຊົນທັງປວງກໍຮ້ອງໄຫ້ຫາເຂົາ
ອີກ.
[35]ແລ້ວປະຊາຊົນທັງປວງກໍໄດ້ມາບອກດາວິດໃຫ້ກິນອາຫານເມື່ອເວລາຍັງເວັນຢູ່, ແຕ່ດາວິດປາຖະຫນາວ່າ, "ຂໍພຣະເຈົ້າຊົງລົງໂທດເຮົາ, ແລະ
ຊົງເພີ່ມໂທດນັ້ນດ້ວຍ, ຖ້າເຮົາໄດ້ຊີມເຂົ້າຈີ່ ຫລື ສິ່ງອື່ນໃດກ່ອນດວງອາທິດຕົກ."[36]ປະຊາຊົນທັງປວງໄດ້ສັງເກດເຫັນການໂສກເສົ້າຂອງດາວິດ,
ແລະ ກໍໄດ້ພໍໃຈພວກເຂົາ, ບໍ່ວ່າສິ່ງໃດກໍຕາມທີ່ກະສັດໄດ້ເຮັດແລ້ວສ້າງຄວາມພໍໃຈໃຫ້ພວກເຂົາ.
[37]ດັ່ງນັ້ນປະຊາຊົນທັງຫລາຍອິດສະຣາເອນທັງປວງກໍໄດ້ເຂົ້າໃຈໃນວັນນັ້ນວ່າ ກະສັດບໍ່ໄດ້ມີຄວາມປາຖະຫນາໃນການຂ້າອັບເນລູກຊາຍຂອງ
ເນຣະ.[38]ກະສັດໄດ້ເວົ້າກັບພວກຂ້າຣາຊການຂອງຕົນວ່າ,"ພວກທ່ານບໍ່ຮູ້ບໍວ່າ ວັນນີ້ເຈົ້າຊາຍ ແລະ ຄົນທີ່ຍິ່ງໃຫຍ່ຄົນຫນຶ່ງໄດ້ລົ້ມລົງໃນອິດສະ
ຣາເອນ?[39]ບາດນີ້ ເຮົາກໍອ່ອນກຳລັງໃນວັນນີ້, ເຖິງແມ່ນວ່າເຮົາໄດ້ຮັບການເຈີມເປັນກະສັດແລ້ວ. ຜູ້ຊາຍເຫລົ່ານີ້ຊື່ງເປັນລູກຊາຍ, ຂອງນາງເຊຣູ
ອີຢານີ, ກໍໂຫດຮ້າຍເກີນໄປສຳລັບເຮົາ. ຂໍພຣະຢາເວຕອບສະຫນອງຜູ້ເຮັດຊົ່ວໂດຍການລົງໂທດເຂົາຕາມຄວາມຊົ່ວ, ທີ່ເຂົາສົມຄວນໄດ້ຮັບ
ເຖີດ."

 generated on Tue Jun 17 19:01:42 2025

4 [1]ເມື່ອອີຊະໂບເຊັດ, ລູກຂອງກະສັດໂຊນ, ໄດ້ຮັບຮູ້ວ່າອັບເນໄດ້ຕາຍທີ່ເມືອງເຮັບໂຣນ, ມືຂອງເຂົາກໍໄດ້ອ່ອນແຮງລົງ, ແລະ ອິດສະຣາເອນທັງ
ຫລາຍກໍທໍ້ໃຈ.[2]ບັດນີ້ລູກຊາຍຂອງກະສັດໂຊນໄດ້ມີຜູ້ຊາຍສອງຄົນເປັນຫົວຫນ້າຫນ່ວຍທະຫານ. ຊື່ຂອງເຂົາແມ່ນບາອານາ ແລະ ອີກຄົນ
ຫນຶ່ງຊື່ເຣກາບ, ທັງສອງນີ້ເປັນລູກຊາຍຂອງຣິມໂມນ ຊາວເມືອງເບເອໂຣດ ຄົນເຜົ່າເບັນຢາມິນ (ເພາະວ່າເບເອໂຣດຖືກນັບເຂົ້າເປັນສ່ວນຫນຶ່ງ
ຂອງເຜົ່າເບັນຢາມິນພ້ອມ,[3]ແລະ ຊາວເບເອໂຣດໄດ້ຫນີໄປຍັງກິດຕາອິມ ແລະ ໄດ້ອາໄສຢູ່ທີ່ນັ້ນຈົນເຖິງທຸກວັນນີ້).

[4]ບັດນີ້ ໂຢນາທານ, ລູກຊາຍຂອງກະສັດໂຊນ, ມີລູກຊາຍຄົນຫນຶ່ງທີ່ຕີນຂອງເຂົາເປັນງ່ອຍ. ເມື່ອເດັກຄົນນີ້ມີອາຍຸຫ້າປີ ໄດ້ມີຂ່າວເລື່ອງ
ຂອງໂຊນ ກັບໂຢນາທານມາຈາກຢິດຊະເຣນ. ພະຍາບານຂອງເຂົາໄດ້ອຸ້ມລຸກຂຶ້ນຫນີ. ແຕ່ເມື່ອລາວກໍາລັງແລ່ນຫນີນັ້ນ, ລູກຊາຍຂອງໂຢນາ
ທານໄດ້ຕົກລົງ ແລະ ໄດ້ກາຍເປັນງ່ອຍຂາເປ້ຍ. ເຂົາຊື່ເມຟີໂບເຊັດ.
[5]ດັ່ງນັ້ນລູກຊາຍທັງສອງຂອງຣິມໂມນຊາວເບເອໂຣດ, ທີ່ຊື່ເຣກາບ ແລະ ບາອານາ, ນັ້ນໄດ້ເດີນທາງໃນຊ່ວງທີ່ຮ້ອນຂອງກາງເວັນ ໄປຮອດວັງ
ຂອງອີຊະໂບເຊັດ, ໃນຂະນະທີ່ເພິ່ນກໍາລັງພັກທ່ຽງ.[6]ຜູ້ຍິງທີ່ເຝົ້າຍາມປະຕູກໍໄດ້ເຜີຫລັບໄປ ຂະນະຝັດຫ່ອນເຂົ້າສາລີ, ແລະ ເຣກາບ ແລະ ບາ
ອານາກໍໄດ້ຍ່າງຍ່ອງເຂົ້າໄປຢ່າງງຽບໆ ແລະ ໄດ້ຜ່ານນາງໄປໄດ້.[7]ດັ່ງນັ້ນ ຫລັງຈາກທີ່ພວກເຂົາທັງສອງໄດ້ເຂົ້າໄປໃນວັງນັ້ນ, ພວກເຂົາກໍໄດ້ຈູ່
ໂຈມອີຊະໂບເຊັດ ແລະ ໄດ້ຂ້າເຂົາໃນຂະນະທີ່ເຂົາກໍາລັງນອນຫລັບຢູ່ເທິງບ່ອນນອນໃນຫ້ອງນອນຂອງເຂົາ. ແລ້ວພວກເຂົາກໍໄດ້ຕັດຫົວຂອງ
ເຂົາ ແລະ ໄດ້ນໍາຫົວນັ້ນໄປ, ພວກເຂົາໄດ້ເດີນທາງໄປຕາມຫົນທາງຕະຫລອດຄືນຈົນຮອດຮ່ອມພູອາຣາບາ.
[8]ພວກເຂົານໍາເອົາຫົວຂອງອີຊະໂບເຊັດມາໃຫ້ດາວິດຢູ່ທີ່ເມືອງເຮັບໂຣນ, ແລະ ພວກເຂົາເວົ້າວ່າ, "ຂໍໄດ້ຊົງເບິ່ງເຖີດ, ນີ້ຄືຫົວຂອງອີຊະໂບ
ເຊັດລູກຊາຍຂອງກະສັດໂຊນ, ສັດຕູຂອງທ່ານ, ຜູ້ທີ່ຕ້ອງການພະຍາຍາມຂ້າທ່ານ. ໃນວັນນີ້ພຣະຢາເວໄດ້ຊົງແກ້ແຄ້ນແທນກະສັດເຈົ້ານາຍ
ຂອງຂ້ານ້ອຍຕໍ່ຕ້ານໂຊນ ແລະ ເຊື້ອສາຍຂອງເພິ່ນແລ້ວ"[9]ດາວິດໄດ້ກ່າວຕອບເຣກາບ ແລະ ບາອານາອ້າຍຂອງເຂົາ, ລູກຊາຍຣິມໂມນຊາວເບ
ເອໂຣດ; ທ່ານໄດ້ກ່າວກັບພວກເຂົາວ່າ, "ພຣະຢາເວຊົງດໍາລົງຊີວິດຢູ່, ຜູ້ຊົງຊ່ວຍກູ້ຊີວິດຂອງເຮົາຈາກຄວາມທຸກຍາກທັງປ່ວງ,[10]ເມື່ອມີຜູ້ໃດໄດ້
ບອກເຮົາວ່າ, "ເບິ່ງແມ, ກະສັດໂຊນເສຍຊີວິດແລ້ວ," ແລ້ວຄິດວ່າເຂົາເປັນຜູ້ນໍາຂ່າວດີມາ, ເຮົາກໍໄດ້ຈັບເຂົາ ແລະ ໄດ້ຂ້າເສຍທີ່ເມືອງຊິກລັກ.
ນັ້ນເປັນລາງວັນທີ່ເຮົາໄດ້ໃຫ້ແກ່ເຂົາສໍາລັບຂ່າວຂອງທ່ານນັ້ນ.
[11]ຍິ່ງກວ່ານັ້ນເທົ່າໃດ, ເມື່ອເຫລົ່າຄົນຊົ່ວໄດ້ຂ້າຄົນອະທໍາທີ່ໃນບ້ານ ແລະ ເທິງບ່ອນນອນຂອງເຂົານັ້ນ, ຄວນບໍທີ່ເຮົາຈະບໍ່ຮ້ອງເອົາເລືອດຂອງເຂົາ
ຈາກມືຂອງພວກເຈົ້າ, ແລະທໍາລາຍພວກເຈົ້າເສຍຈາກແຜ່ນດິນ?"[12]ແລ້ວດາວິດກໍໄດ້ຊົງອອກຄໍາສັ່ງພວກຄົນຫນຸ່ມ, ແລະ ພວກເຂົາກໍໄດ້ຂ້າ
ພວກເຂົາທັງສອງ ແລະ ໄດ້ຕັດມື ແລະຕັດຕີນຂອງພວກເຂົາ ແລະ ໄດ້ແຂວນສົບພວກເຂົາໄວ້ທີ່ຂ້າງສະນ້ໍາທີ່ເມືອງເຮັບໂຣນ. ແຕ່ພວກເຂົາໄດ້ນໍາ
ຫົວຂອງອີຊະໂບເຊັດໄປຝັງໄວ້ທີ່ຝັງສົບຂອງອັບເນທີ່ເມືອງເຮັບໂຣນ.

 generated on Tue Jun 17 19:01:42 2025

5 1ແລ້ວທຸກເຜົ່າຂອງອິດສະຣາເອນກໍໄດ້ມາຫາດາວິດທີ່ເມືອງເຮັບໂຣນ ແລະ ໄດ້ກ່າວວ່າ,"ເບິ່ງເທີ້ນ, ພວກຂ້ານ້ອຍເປັນກະດູກ ແລະ ເນື້ອໜັງ
ຂອງທ່ານ.2ໃນອາດີດເມື່ອບໍ່ດົນມານີ້, ເມື່ອກະສັດໂຊນຊົງໄດ້ເປັນກະສັດຂອງພວກຂ້ານ້ອຍ, ກໍເປັນທ່ານນັ້ນ ທີ່ຊົງເປັນຜູ້ນຳກອງທັບຂອງອິດ
ສະຣາເອນ. ພຣະຢາເວໄດ້ກ່າວແກ່ເພິ່ນວ່າ, "ເຈົ້າຈະນຳປະຊາຊົນອິດສາະຣາເອນຂອງເຮົາ, ແລະ ເຈົ້າຈະເປັນຜູ້ປົກຄອງເຫນືອອິດສະຣາ
ເອນ."

3ດັ່ງນັ້ນພວກຜູ້ອາວຸໂສທັງຫມົດຂອງອິດສະຣາເອນກໍໄດ້ມາເຝົ້າກະສັດທີ່ເມືອງເຮັບໂຣນ, ແລະ ກະສັດດາວິດກໍໄດ້ຊົງເຮັດພັນທະສັນຍາກັບ
ພວກເຂົາ ສະເພາະຫນ້າພຣະຢາເວ. ພວກເຂົາກໍໄດ້ເຈີມດາວິດໃຫ້ເປັນກະສັດເຫນືອອິດສະຣາເອນ.4ດາວິດຊົງມີອາຍຸໄດ້ສາມສິບປີ ເມື່ອຊົງ
ເລີ່ມຄອງຣາດ, ແລະ ທ່ານໄດ້ຊົງຄອງຣາດຢູ່ສີ່ສິບປີ.5ຊົງຄອງຣາດເຫນືອຢູດາຍ ທີ່ເມືອງເຮັບໂຣນເປັນເວລາ ເຈັດປີຫົກເດືອນ, ແລະ ທີ່ນະຄອນ
ເຢຣູຊາເລັມ ທ່ານໄດ້ຊົງຄອງຣາດສາມສິບປີເຫນືອອິດສະຣາເອນ ແລະ ຢູດາຍທັງຫມົດ.
6ກະສັດ ແລະ ພວກຄົນຂອງເພິ່ນໄດ້ໄປນະຄອນເຢຣູຊາເລັມຕໍ່ສູ້ກັບຄົນເຢບຸດ, ພວກທີ່ອາໄສໃນແຜ່ນດິນນັ້ນ. ພວກເຂົາໄດ້ກ່າວກັບດາວິດວ່າ,
"ເຈົ້າຈະບໍ່ເຂົ້າມາທີ່ນີ້ ເວັ້ນແຕ່ວ່າຄົນຕາບອດ ແລະ ຄົນພິການຈະຫັນຫລັງໃຫ້. ດາວິດບໍ່ສາມາດເຂົ້າມາທີ່ນີ້ໄດ້."7ຢ່າງໃດກໍຕາມ, ດາວິດໄດ້ຊົງ
ຢຶດທີ່ກຳບັງເຂັ້ມແຂງຂອງຊີໂອນໄດ້, ຊຶ່ງບັດນີ້ກໍຄືເມືອງຂອງດາວິດ.
8ໃນເວລານັ້ນກະສັດດາວິດໄດ້ກ່າວວ່າ, "ໃຜຈະໂຈມຕີຄົນເຢບຸດ ກໍໃຫ້ຜູ້ນັ້ນໄປຕາມທາງນ້ຳ ໄປສູ່ 'ຄົນພິການ ແລະ ຄົນຕາບອດ' ຜູ້ເປັນພວກ
ສັດຕູຂອງດາວິດ." ນັ້ນຄືເປັນຫຍັງພວກເຂົາຈຶ່ງໄດ້ເວົ້າວ່າ, "ຢ່າໃຫ້ 'ຄົນຕາບອດ ແລະຄົນພິການ' ເຂົ້າມາໃນຣາຊວັງ."9ດັ່ງນັ້ນ ດາວິດກໍໄດ້ປະ
ທັບຢູ່ໃນທີ່ກຳບັງເຂັ້ມແຂ້ງ ແລະ ກໍໄດ້ຮ້ອງທີ່ນັ້ນວ່າເມືອງດາວິດ. ເພິ່ນໄດ້ຊົງເສີມສ້າງຮອບເມືອງ, ຈາກດ້ານຫນ້າໄປຈົນຮອດດ້ານໃນ.10ດາວິດກໍ
ໄດ້ຊົງມີກຳລັງເຂັ້ມແຂງຫລາຍຂຶ້ນ ເພາະວ່າພຣະຢາເວ, ພຣະເຈົ້າແຫ່ງຈອມໂຢທາ, ໄດ້ສະຖິດກັບເພິ່ນ.
11ແລ້ວຮີຣາມກະສັດເມືອງຕີເຣໄດ້ຊົງສົ່ງພວກຄະນະຜູ້ສົ່ງຂ່າວສານມາຫາດາວິດ, ແລະໄດ້ຊົງສົ່ງໄມ້ແປກ, ພວກຊ່າງໄມ້, ແລະ ພວກຊ່າງກໍ່
ສ້າງ. ພວກເຂົາໄດ້ມາສ້າງວັງສຳລັບດາວິດ.12ດາວິດໄດ້ຊົງຮູ້ວ່າ ພຣະຢາເວຊົງແຕ່ງຕັ້ງເພິ່ນໃຫ້ເປັນກະສັດເຫນືອອິດສະຣາເອນ, ແລະເພິ່ນໄດ້
ຊົງຍົກຍ້ອງຣາຊອານາຈັກຂອງເພິ່ນ ດ້ວຍເຫັນແກ່ອິດສະຣາເອນປະຊາຊົນຂອງເພິ່ນ.
13ພາຍຫລັງທີ່ດາວິດໄດ້ອອກຈາກເຮັບໂຣນ ແລະ ໄດ້ລົງມາທີ່ນະຄອນເຢຣູຊາເລັມ, ດາວິດຊົງໄດ້ມີເຫລົ່ານາງສະຫນົມເມຍນ້ອຍ ແລະ
ເມຍຫລາຍເພີ່ມຂຶ້ນອີກໃນເຢຣູຊາເລັມ, ແລະ ມີລູກຊາຍ ແລະ ລູກສາວໄດ້ເກີດກັບເພິ່ນຕື່ມອີກ.14ຕໍ່ໄປນີ້ເປັນລາຍຊື່ ທີ່ໄດ້ເກີດລູກໃນຢເຣູຊາ
ເລັມຄື: ຊາມມູອາ, ໂຊບັບ, ນາທານ, ໂຊໂລໂມນ,15ອີບຮາ, ເອລີຊູອາ, ເນເຟັກ, ຢາເຟຍ,16ເອລີຊາມາ, ເອລີອາດາ, ແລະເອລີເຟເລັດ.
17ບັດນີ້ ເມື່ອຄົນຟີລິດສະຕິນໄດ້ຍິນວ່າດາວິດໄດ້ຊົງຮັບການເຈີມເປັນກະສັດເຫນືອອິດສະຣາເອນ, ພວກເຂົາທັງປວງກໍໄດ້ຂຶ້ນໄປຊອກຫາດາວິດ.
ແຕ່ດາວິດໄດ້ຊົງຮູ້ເລື່ອງນີ້ ແລະ ໄດ້ລົງໄປຍັງທີ່ກຳບັງເຂັ້ມແຂງ.18ບັດນີ້ ຄົນຟີລິດສະຕິນກໍໄດ້ມາ ແລະ ໄດ້ຂະຫຍາຍອອກໄປທີ່ຫຸບເຂົາເຣຟາອີມ.
19ແລ້ວດາວິດໄດ້ກ່າວຂໍການຊົງຊ່ວຍເຫລືອຈາກພຣະຢາເວ. ເພິ່ນໄດ້ກ່າວວ່າ, "ຄວນທີ່ຂ້ານ້ອຍຈະຍົກຂຶ້ນໄປສູ້ຮົບກັບຄົນຟີລິດສະຕິນຫລືບໍ່?"
ພຣະອົງຈະຊົງມອບໄຊຊະນະເຫນືອພວກເຂົາຫລືບໍ່?" ພຣະຢາເວໄດ້ກ່າວກັບດາວິດວ່າ, "ຈົ່ງໄປໂຈມຕີພວກເຂົາ,
ເຮົາຈະໃຫ້ເຈົ້າສູ້ຮົບຊະນະ."20ດັ່ງນັ້ນດາວິດຈຶ່ງໄດ້ຊົງໂຈມຕີທີ່ບາອານເປຣາຊິມ, ແລະ ທີ່ນັ້ນເອງເພິ່ນໄດ້ຊົງຊະນະພວກເຂົາ. ເພິ່ນໄດ້ກ່າວວ່າ, ”
ພຣະຢາເວຊົງໄດ້ຕີເຫລົ່າຂ້າສຶກຂອງຂ້ານ້ອຍຕໍ່ຫນ້າຂ້ານ້ອຍດັ່ງກະແສນ້ຳໄຫລຖ້ວມທີ່ພຸ້ງໃສ່." ດັ່ງນັ້ນ ຊື່ຂອງສະຖານທີ່ນັ້ນຈຶ່ງໄດ້ປ່ຽນເປັນ ບາ
ອານເປຣາຊິມ.21ຄົນຟີລິດສະຕິນໄດ້ຖິ້ມຮູບເຄົາລົບທີ່ນັ້ນ, ແລະ ດາວິດແລະຄົນຂອງເພິ່ນກໍຂົນເອົາໄປ.
22ແລ້ວຄົນຟີລິດສະຕິນໄດ້ຍົກຂຶ້ນມາອີກ ແລະ ໄດ້ຂະຫຍາຍແນວອີກຄັ້ງຫນຶ່ງໃນພູເຂົາເຣຟາອີມ.23ດັ່ງນັ້ນດາວິດຊົງໄດ້ສະແຫວງຫາການຊົງ
ຊ່ວຍຈາກພຣະຢາເວ ອີກຄັ້ງ, ແລະ ພຣະຢາເວໄດ້ກ່າວກັບເພິ່ນວ່າ, "ເຈົ້າຢ່າຂຶ້ນໄປໂຈມຕີດ້ານຫນ້າຂອງພວກເຂົາ, ແຕ່ຈົ່ງອ້ອມໄປຂ້າງຫລັງ
ຂອງພວກເຂົາ ແລະ ເຂົ້າເຖິງພວກເຂົາທາງຫນ້າຫມູ່ຕົ້ນມອນ.
24ເມື່ອເຈົ້າໄດ້ຍິນສຽງຢ່າງຢູ່ເທິງຕົ້ນໄມ້ໃນສາຍລົມພັດຜ່ານຍອດຕົ້ນມອນແລ້ວ, ຈົ່ງໂຈມຕີເຂົ້າໄປດ້ວຍກອງກຳລັງ. ຈົ່ງເຮັດຢ່າງນີ້ເພາະພຣະຢາ
ເວຈະລົງໄປຂ້າງຫນ້າເຈົ້າ ເພື່ອໂຈມຕີກອງທັບຂອງຄົນຟີລິດສະຕິນ."25ດັ່ງນັ້ນດາວິດໄດ້ຊົງເຮັດຕາມທີ່ພຣະຢາເວໄດ້ຊົງບັນຊາໄວ້. ເພິ່ນໄດ້ຊົງສັງ
ຫານຄົນຟີລິດສະຕິນຈາກເມືອງເກບາຈົນເຖິງເມືອງເກເຊ.

6 [1]ບັດນີ້ດາວິດໄດ້ຊົງລວບລວມຄົນອິດສະຣາເອນໄດ້ເລືອກເອົາຜູ້ເກັ່ງກ້າໃນອິດສະຣາເອນທັງຫມົດອີກຄັ້ງຫນຶ່ງ, ໄດ້ສາມຫມື່ນຄົນ.[2]ດາວິດກໍ
ໄດ້ຊົງລຸກຂຶ້ນ ແລະ ໄດ້ໄປກັບປະຊາຊົນທັງຫມົດຂອງເພິ່ນ ຜູ້ທີ່ໄດ້ຢູ່ກັບເພິ່ນທີ່ໄດ້ມາຈາກບາອາລາໃນຢູດາຍ ເພື່ອນໍາຫີບພັນທະສັນຍາຂອງ
ພຣະເຈົ້າຂຶ້ນມາຈາກທີ່ນັ້ນ, ຊຶ່ງໄດ້ຮ້ອງຕາມພຣະນາມຂອງພຣະຢາເວຈອມໂຢທາ, ຜູ້ປະທັບເຫນືອພວກເຄຣຸບ.

[3]ພວກເຂົາກໍໄດ້ເອົາລໍ້ຄັນໃຫມ່ບັນຈຸຫີບພັນທະສັນຍາຂອງພຣະເຈົ້າ. ພວກເຂົາໄດ້ນໍາອອກມາຈາກບ້ານຂອງອາບີນາດາບ, ຊຶ່ງຢູ່ເທິງເນີນພູ. ອຸດ
ຊາ ແລະ ອາຮີໂອ, ພວກລູກຊາຍຂອງເຂົາ, ກໍໄດ້ຂັບລໍ້ຄັນໃຫມ່ນັ້ນ.[4]ພວກເຂົາໄດ້ນໍາລໍ້ທີ່ໄດ້ບັນທຸກຫີບພັນທະສັນຍາຂອງພຣະເຈົ້າອອກຈາກ
ບ້ານຂອງອາບີນາດາບຊຶ່ງຢູ່ເທິງເນີນພູ. ອາຮີໂອໄດ້ຍ່າງທາງຫນ້າຫີບ.[5]ແລ້ວດາວິດ ແລະທຸກຄົນຂອງອິດສະຣາເອນກໍໄດ້ເລີ່ມມ່ວນຊື່ນກັນສະ
ເພາະຕໍ່ຫນ້າພຣະຢາເວ, ໄດ້ສະເຫລີມສະຫລອງກັນດ້ວຍເຄື່ອງດົນຕີໄມ້, ດ້ວຍພິນ, ດ້ວຍພິນໃຫຍ່, ດ້ວຍສັນກະລໍ, ດ້ວຍກອງ, ແລະ ກະຈັບປີ່.
[6]ເມື່ອພວກເຂົາໄດ້ມາຮອດລານຟາດເຂົ້ານາໂກນ, ເຫລົ່າງົວນັ້ນກໍໄດ້ສະດຸດ, ແລະອຸດຊາກໍໄດ້ເດ່ມືຂອງເຂົາອອກໄປຈັບຫີບພັນທະສັນຍາຂອງພ
ຣະເຈົ້າໄວ້, ແລະ ເຂົາໄດ້ຈັບທັງຫີບໄວ້.[7]ແລ້ວພຣະຢາເວກໍໄດ້ໂກດຮ້າຍອຸດຊາ. ພຣະເຈົ້າໄດ້ຊົງປະຫານເຂົາທີ່ນັ້ນເພາະຄວາມຜິດຂອງເຂົາ.
ອຸດຊາໄດ້ຕາຍທີ່ຂ້າງຫີບພັນທະສັນຍາຂອງພຣະເຈົ້າ.
[8]ດາວິດກໍໄດ້ໃຈຮ້າຍ ເພາະພຣະເຢາເວໄດ້ຊົງປະຫານອຸດຊາ, ແລະ ເພິ່ນໄດ້ຮ້ອງທີ່ບ່ອນນັ້ນວ່າ ເປເຣັດອຸດຊາ ສະຖານທີ່ນັ້ນກໍໄດ້ຊື່ວ່າ ເປເຣັດ
ອຸດຊາມາຈົນເຖິງທຸກວັນນີ້.[9]ໃນວັນນັ້ນດາວິດກໍໄດ້ຊົງຢ້ານພຣະຢາເວ. ເພິ່ນໄດ້ກ່າວວ່າ,
"ເຮົາຈະນໍາເອົາຫີບພັນທະສັນຍາຂອງພຣະຢາເວນີ້ໄປໄດ້ຢ່າງໃດ?"
[10]ດັ່ງນັ້ນດາວິດຈຶ່ງບໍ່ໄດ້ຊົງຍອມນໍາຫີບພັນທະສັນຍາຂອງພຣະຢາເວເຂົ້າໄປກັບເພິ່ນໃນເມືອງຂອງດາວິດ. ແຕ່ເພິ່ນໄດ້ຊົງໃຫ້ລ້ຽວໄປທີ່ບ້ານຂອງ
ໂອເບັດເອໂດມຊາວເມືອງກາດ.[11]ຫີບຂອງພຣະຢາເວກໍໄດ້ຢູ່ທີ່ບ້ານຂອງໂອເບັດເອໂດມຊາວເມືອງກາດເປັນເວລາສາມເດືອນ. ດັ່ງນັ້ນພຣະຢາເວ
ກໍໄດ້ຊົງອວຍພອນເຂົາ ແລະ ຄອບຄົວຂອງເຂົາທຸກຄົນ.
[12]ມີຄົນໄດ້ໄປບອກກະສັດດາວິດວ່າ, "ພຣະຢາເວຊົງອວຍພອນຄອບຄົວຂອງໂອເບັດເອໂດມ ແລະ ທຸກສິ່ງທີ່ເປັນຂອງເຂົາເນື່ອງດ້ວຍ
ຫີບພັນທະສັນຍາຂອງພຣະເຈົ້າ. "ດັ່ງນັ້ນດາວິດຈຶ່ງໄດ້ຂຶ້ນໄປນໍາຫີບພັນທະສັນຍາຂອງພຣະເຈົ້າຈາກບ້ານຂອງໂອເບັດເອໂດມເຖິງເມືອງຂອງດາ
ວິດດ້ວຍຄວາມຊື່ນຊົມຍິນດີ.[13]ເມື່ອພວກເຂົາເຫລົ່ານັ້ນທີ່ກໍາລັງຫາມຫີບຂອງພຣະຢາເວໄດ້ຍ່າງໄປໄດ້ຫົກກ້າວ, ເພິ່ນກໍໄດ້ຊົງຖວາຍງົວໂຕຫນຶ່ງ
ກັບລູກງົວຕຸ້ຍໂຕຫນຶ່ງ.
[14]ດາວິດກໍໄດ້ຊົງເຕັ້ນລໍາຕໍ່ຫນ້າພຣະຢາເວ ດ້ວຍສຸດກໍາລັງຂອງເພິ່ນ; ເພິ່ນໄດ້ສວມພຽງເສື້ອປ່ານເທົ່ານັ້ນ.[15]ດັ່ງນັ້ນດາວິດ ແລະ ທຸກຄົນທັງຫມົດ
ໃນເຮືອນຂອງອິດສະຣາເອນ ກໍໄດ້ນໍາຫີບພັນທະສັນຍາຂອງພຣະຢາເວຂຶ້ນມາ ດ້ວຍສຽງໂຮ່ຮ້ອງ ແລະ ດ້ວຍສຽງແກທັງຫລາຍ.
[16]ບັດນີ້ຂະນະທີ່ຫີບພັນທະສັນຍາຂອງພຣະຢາເວໄດ້ເຂົ້າມາຮອດເມືອງຂອງດາວິດ, ນາງມີການ, ລູກສາວຂອງກະສັດໂຊນ, ກໍໄດ້ເບິ່ງອອກໄປທີ
ປ່ອງຢ້ຽມ. ນາງໄດ້ຊົງເຫັນກະສັດດາວິດຊົງກໍາລັງໂດດ ແລະ ກໍາລັງເຕັ້ນລໍາ ຕໍ່ຫນ້າພຣະຢາເວ. ແລ້ວນາງກໍໄດ້ດູຖູກດາວິດໃນໃຈ.[17]ພວກເຂົາ
ໄດ້ນໍາຫີບພັນທະສັນຍາຂອງພຣະຢາເວເຂົ້າມາຕັ້ງໄວ້ໃນທີ່ກໍາຫນົດ, ບ່ອນກາງເຕັນຊຶ່ງດາວິດໄດ້ຊົງກໍານົດໄວ້ ແລ້ວດາວິດກໍໄດ້ຊົງຖວາຍເຄື່ອງ
ເຜົາບູຊາ. ແລະ ເຄື່ອງສັນຕິບູຊາຕໍ່ຫນ້າພຣະຢາເວ.
[18]ເມື່ອດາວິດໄດ້ຊົງສໍາເລັດການຖວາຍເຄື່ອງເຜົາບູຊາ ແລະ ເຄື່ອງຖວາຍສາມັກຄີທໍາແລ້ວ, ເພິ່ນກໍໄດ້ຊົງອວຍພອນປະຊາຊົນໃນພຣະນາມຂອງ
ພຣະຢາເວຈອມໂຢທາ.[19]ແລ້ວເພິ່ນໄດ້ຊົງແຈກເຂົ້າຈີ່ ໃຫ້ແກ່ປະຊາຊົນທຸກຄົນ, ຄືປະຊາຊົນອິດສະຣາເອນທັງຜູ້ຊາຍ ແລະ ຜູ້ຍິງ, ໃຫ້ເຂົ້າຈີ່ຄົນ
ລະກ້ອນ, ຊີ້ນປີ້ງຜູ້ລະຕ່ອນ, ແລະເຄັກຫມາກລະແຊ້ງຄົນລະກ້ອນ. ແລ້ວປະຊາຊົນທັງປວງຕ່າງກໍກັບໄປຍັງບ້ານຂອງຕົນ.
[20]ແລ້ວດາວິດກໍໄດ້ຊົງກັບໄປອວຍພອນແກ່ຄອບຄົວຂອງເພິ່ນ. ແຕ່ນາງມີການ, ລູກສາວຂອງກະສັດໂຊນ ໄດ້ອອກມາພົບດາວິດ ແລະ ເວົ້າວ່າ,
"ວັນນີ້ກະສັດແຫ່ງອິດສະຣາເອນໄດ້ກຽດຕິຍົດອັນຍິ່ງໃຫຍ່ເລີຍ, ຜູ້ໄດ້ຊົງແກ້ເຄື່ອງຂອງທ່ານໃນວັນນີ້ຕໍ່ຫນ້າພວກສາວໃຊ້ຂອງລາວ,
ຄືຄົນບ້າໃຫ້ກັບຄົນຮັບໃຊ້ຂອງຕົນເບິ່ງຢ່າງບໍ່ອາຍ!"
[21]ດາວິດໄດ້ຊົງກ່າວຕອບນາງມີການວ່າ, "ເຮົາໄດ້ເຮັດສິ່ງນັ້ນຕໍ່ຫນ້າພຣະຢາເວ, ຜູ້ໄດ້ຊົງເລືອກເຮົາໄວ້ເຫນືອພໍ່ຂອງເຈົ້າ ແລະ ເຫນືອຣາຊວົງທັງ
ຫມົດຂອງເພິ່ນ, ຜູ້ໄດ້ຊົງແຕ່ງຕັ້ງໃຫ້ເຮົາເປັນຜູ້ນໍາເຫນືອປະຊາຊົນຂອງພຣະຢາເວ, ເຫນືອອິດສະຣາເອນ. ຕໍ່ຫນ້າພຣະຢາເວເຮົາຈຶ່ງຈະຟ້ອນ
ຢ່າງນີ້ຕໍ່ໄປ![22]ເຮົາຈະຍອມຖືກດູຖູກຍິ່ງກວ່ານີ້, ແລະ ເຮົາຈະເປັນຄົນຕໍ່າຕ້ອຍໃນສາຍຕາເຮົາເອງ. ແຕ່ພວກສາວໃຊ້ທີ່ເຈົ້າໄດ້ເວົ້າເຖິງນັ້ນ ສໍາລັບ
ພວກເຂົາ, ເຮົາຈະເປັນຜູ້ທີ່ໄດ້ຮັບກຽດ."[23]ດັ່ງນັ້ນນາງມີການ, ລູກສາວຂອງກະສັດໂຊນ, ກໍບໍ່ມີລູກຈົນເຖິງມື້ຕາຍຂອງນາງ.

 generated on Tue Jun 17 19:01:42 2025

7 1ສິ່ງນີ້ໄດ້ເກີດຂຶ້ນ ຫລັງຈາກທີ່ກະສັດໄດ້ຢູ່ໃນວັງຂອງເພິ່ນ, ແລະ ຫລັງຈາກທີ່ພຣະຢາເວໄດ້ຊົງໃຫ້ເພິ່ນສະງົບຈາກເຫລົ່າສັດຕູຮອບດ້ານຂອງ
ເພິ່ນ,2ກະສັດໄດ້ກ່າວກັບຜູ້ທຳນວາຍນາທານວ່າ, "ຈົ່ງເບິ່ງເທີ້ນ, ເຮົາຢູ່ໃນວັງທີ່ເຮັດດ້ວຍໄມ້ແປກ, ແຕ່ຫີບພັນທະສັນຍາຂອງພຣະເຈົ້າຊົງຢູ່
ໃນເຕັ້ນ."

3ແລ້ວນາທານໄດ້ຕອບກະສັດວ່າ, "ຈົ່ງໄປ, ຊົງເຮັດທຸກສິ່ງຕາມໃຈຂອງທ່ານ, ເພາະພຣະຢາເວຊົງສະຖິດກັບທ່ານ."4ແຕ່ໃນຄືນດຽວກັນນັ້ນ ຄຳ
ສັ່ງຂອງພຣະຢາເວໄດ້ມາເຖິງນາທານ, ກ່າວວ່າ,5"ຈົ່ງໄປ ແລະ ບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ, 'ນີ້ແມ່ນຣະຢາເວກ່າວດັ່ງນີ້ວ່າ: ເຈົ້າຈະສ້າງວິ
ຫານໃຫ້ເຮົາຢູ່ບໍ?
6ເພາະເຮົາບໍ່ເຄີຍຢູ່ໃນວິຫານນັບແຕ່ວັນທີ່ເຮົາໄດ້ນຳຄອບຄົວອິດສະຣາເອນຂຶ້ນມາຈາກເອຢິບຈົນເຖິງວັນນີ້, ແຕ່ເຮົາເອງກໍໄປອາໄສຢູ່ຫໍເຕັ້ນ,
ແລະ ຫໍສັກສິດ.7ໃນທີ່ຕ່າງໆທີ່ເຮົາໄດ້ໄປກັບປະຊາຊົນອິດສະຣາເອນທັງຫມົດ, ເຮົາເຄີຍເວົ້າກັບຜູ້ນຳຄົນໃດຂອງຄົນອິດສະຣາເອນ, ຜູ້ທີ່ເຮົາໄດ້
ແຕ່ງຕັ້ງໃຫ້ເຂົາລ້ຽງດູອິດສະຣາເອນປະຊາຊົນຂອງເຮົາ, ເວົ້າວ່າ,"ເປັນຫຍັງພວກເຈົ້າບໍ່ສ້າງວິຫານໄມ້ແປກໃຫ້ເຮົາ?'""
8ສະນັ້ນບັດນີ້, ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ, "ນີ້ຄືທີ່ພຣະຢາເວຈອມໂຢທາໄດ້ກ່າວດັ່ງນີ້ວ່າ: 'ເຮົາໄດ້ນຳເຈົ້າມາຈາກທົ່ງຫຍ້າ, ຈາກ
ການຕາມຝູງແກະ, ເພື່ອໃຫ້ເຈົ້າເປັນຜູ້ນຳເຫນືອອິດສະຣາເອນປະຊາຊົນຂອງເຮົາ.9ເຮົາໄດ້ຢູ່ກັບເຈົ້າທຸກແຫ່ງທີ່ເຈົ້າໄປ. ເຮົາໄດ້ກຳຈັດສັດຕູ
ຂອງເຈົ້າທັງຫມົດໃຫ້ພົ້ນຫນ້າເຈົ້າ. ແລະ ເຮົາຈະເຮັດໃຫ້ເຈົ້າມີຊື່ສຽງໂດ່ງດັງ, ເຊັ່ນດຽວກັບຊື່ສຽງພວກຜູ້ຍິ່ງໃຫຍ່ໃນໂລກ.
10ເຮົາຈະແຕ່ງຕັ້ງສະຖານທີ່ຫນຶ່ງໃຫ້ອິດສະຣາເອນປະຊາຊົນຂອງເຮົາ ແລະ ເຮົາຈະກໍ່ຕັ້ງພວກເຂົາໄວ້, ເພື່ອພວກເຂົາຈະໄດ້ຢູ່ໃນທີ່ຂອງພວກ
ເຂົາເອງ ແລະ ບໍ່ຖືກລົບກວນອີກຕໍ່ໄປ. ພວກປະຊາຊົນຈະຢູ່ຢ່າງບໍ່ມີການກົດຂີ່ຂົ່ມເຫັງພວກເຂົາອີກ, ດັ່ງທີ່ພວກເຂົາໄດ້ເຮັດໃນເວລາທີ່ຜ່ານມາ,
11ດັ່ງທີ່ພວກເຂົາໄດ້ເຮັດຕັ້ງແຕ່ສະໄຫມເມື່ອເຮົາໄດ້ບັນຊາໃຫ້ຜູ້ປົກຄອງໄດ້ເຮັດເຫນືອອິດສະຣາເອນປະຊາຊົນຂອງເຮົາ. ບັດນີ້ເຮົາຈະໃຫ້ເຈົ້າ
ໄດ້ຢຸດພັກສະງົບຈາກບັນດາສັດຕູຂອງເຈົ້າ. ຍິ່ງໄປກວ່ານັ້ນ, ເຮົາເອງ, ພຣະຢາເວປະກາດກັບພວກເຈົ້າວ່າເຮົາຈະສ້າງເຊື້ອສາຍໃຫ້ເຈົ້າ.
12ເມື່ອວັນຂອງເຈົ້າຄົບສົມບູນແລ້ວ ແລະເຈົ້າໄດ້ຕາຍໄປຢູ່ນຳບັນພະບູລຸດຂອງເຈົ້າ, ເຮົາຈະຍົກຄອບຄົວຂອງເຈົ້າຄົນຫນຶ່ງສືບຕໍ່ຈາກເຈົ້າ, ຜູ້ຊຶ່ງ
ເກີດມາຈາກຕົວເຈົ້າເອງ, ແລະ ເຮົາຈະສ້າງອານາຈັກຂອງເຂົາ.13ເຂົາຈະເປັນຜູ້ສ້າງວິຫານເພື່ອນາມຂອງເຮົາ, ແລະ ເຮົາຈະໃຫ້ບັງລັງແຫ່ງອາ
ນາຈັກຂອງເຂົາໃຫ້ຢູ່ປົກຄອງຕະຫລອດໄປ.14ເຮົາຈະເປັນພໍ່ເຂົາ, ແລະ ເຂົາຈະເປັນລູກຊາຍຂອງເຮົາ. ຖ້າເຂົາເຮັດບາບ, ເຮົາຈະຕີສອນເຂົາ
ດ້ວຍໄມ້ຂອງມະນຸດ ແລະ ດ້ວຍການຂ້ຽນຕີຢ່າງລູກຂອງມະນຸດທັງຫລາຍ.
15ແຕ່ຄຳສັນຍາຄວາມສັດຊື່ຫມັ້ນຄົງຂອງເຮົາຈະບໍ່ຫນີໄປຈາກເຂົາ, ດັ່ງທີ່ເຮົາໄດ້ເຮັດຕໍ່ໂຊນ, ຜູ້ຊຶ່ງເຮົາໄດ້ເຮັດຕໍ່ຫນ້າເຈົ້າ.16ເຊື້ອສາຍຂອງເຈົ້າ
ແລະ ອານາຈັກຂອງເຈົ້າຈະຕັ້ງຫມັ້ນຢູ່ຕໍ່ຫນ້າເຈົ້າຕະຫລອດໄປ ແລະ ບັນລັງຂອງເຈົ້າຈະຫມັ້ນຄົງຕະຫລອດໄປ."17ນາທານກໍໄດ້ບອກດາວິດ
ຕາມຖ້ອຍຄຳເຫລົ່ານີ້ທັງຫມົດ, ແລະ ເຂົາໄດ້ບອກດາວິດຕາມທີ່ພຣະເຈົ້າສຳແດງນີ້ທັງຫມົດ.
18ແລ້ວກະສັດດາວິດຈຶ່ງໄດ້ໄປຢູ່ຕໍ່ຫນ້າພຣະຢາເວ ແລະ ໄດ້ເວົ້າວ່າ "ຂ້າແດ່ພຣະເຈົ້າ, ພຣະເຈົ້າຢາເວ, ຂ້ານ້ອຍເປັນໃຜ, ແລະ ເຊື້ອສາຍຂ້າ
ນ້ອຍເປັນໃຜທີ່ພຣະອົງໄດ້ຊົງນຳຂ້ານ້ອຍມາຮອດຈຸດນີ້?19ບັດນີ້ສິ່ງນີ້ກໍຍັງເປັນສິ່ງເລັກນ້ອຍ, ໃນສາຍຕາຂອງພຣະອົງ, ພຣະເຈົ້າຢາເວ.
ທ່ານກ່າວເຖິງເຊື້ອສາຍຂອງຜູ້ຮັບໃຊ້ຂອງພຣະອົງໃນອານາຄົດ, ແລະ ໄດ້ໃຫ້ຂ້ານ້ອຍໄດ້ຮັບຮູ້ເຖິງຊົນໃນຮຸ້ນຕໍ່ໄປໃນອານາຄົດ ຂ້າແດ່ອົງພຣະ
ຜູ້ເປັນເຈົ້າ, ພຣະຢາເວ!20ຂ້າພນ້ອຍ, ດາວິດ, ຈະທູນຂໍສິ່ງໃດອີກຕໍ່ພຣະອົງໄດ້ອີກ? ພຣະອົງຊົງຍົກຍ້ອງຜູ້ຮັບໃຊ້ຂອງພຣະອົງ, ຂ້າແດ່ພຣະຢາ
ເວອົງພຣະຜູ້ເປັນເຈົ້າ.
21ເພື່ອເຫັນແກ່ຄຳສັ່ງຂອງພຣະອົງ, ແລະເພື່ອໃຫ້ສຳເລັດຕາມປະສົງຂອງພຣະອົງເອງ, ພຣະອົງຊົງເຮັດສິ່ງໃຫຍ່ນີ້ທັງຫມົດ ແລະ ໄດ້ຊົງເປີດ
ເຜີຍໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ.22ສະນັ້ນ ພຣະອົງຊົງຍິ່ງໃຫຍ່, ພຣະເຈົ້າຢາເວ, ພຣະຜູ້ເປັນເຈົ້າບໍ່ມີໃຜສະເຫມີເຫມືອນພຣະອົງ, ແລະ ບໍ່ມີພ
ຣະເຈົ້າໃດອີກນອກເຫນືອພຣະອົງ, ຕາມທີ່ຫູຂອງພວກຂ້ານ້ອຍໄດ້ຍິນມາ.23ຊົນຊາດໃດຈະຄືອິດສະຣາເອນ, ປະຊາຊົນຂອງພຣະອົງ? ຊົນຊາດ
ດຽວໃນໂລກທີ່ພຣະອົງຊົງໄຖ່ເອົາມາຈາກການເປັນທາດຮັບໃຊ້, ເພື່ອໃຫ້ພຣະນາມຂອງພຣະອົງຮັບກຽດ, ເພື່ອຊົງເຮັດສິ່ງຍິ່ງໃຫຍ່ ແລະ ການ
ກະທຳທີ່ເປັນຫນ້າຢຳເກງນັ້ນສຳລັບແຜ່ນດິນຂອງພຣະອົງ. ພຣະອົງໄດ້ຊົງຂັບໄລ່ຊົນຊາດຕ່າງໆ ແລະ ບັນດາພະຕ່າງໆຂອງພວກເຂົາໃຫ້ພົ້ນ
ຫນ້າປະຊາຊົນຂອງພຣະອົງ, ຊຶ່ງພຣະອົງໄດ້ຊົງຊ່ວຍກູ້ອອກຈາກເອຢິບ.
24ພຣະອົງໄດ້ຊົງຕັ້ງອິດສະຣາເອນໃຫ້ເປັນປະຊາຊົນຂອງພຣະອົງຕະຫລອດນິລັນດອນ, ແລະ ພຣະອົງ, ພຣະຢາເວ, ກໍໄດ້ຊົງເປັນພຣະເຈົ້າຂອງ
ພວກເຂົາ.25ບັດນີ້, ຂ້າແດ່ພຣະຢາເວ, ພຣະເຈົ້າ, ຂໍໃຫ້ຄຳສັນຍາທີ່ພຣະອົງໄດ້ກ່າວໄວ້ກ່ຽວກັບຜູ້ຮັບໃຊ້ຂອງພຣະອົງ ແລະ ຄອບຄົວຂອງເຂົາ
ນັ້ນຫມັ້ນຄົງຢູ່ຕະຫລອດໄປ. ຂໍຊົງເຮັດດັ່ງທີ່ພຣະອົງໄດ້ກ່າວໄວ້ນັ້ນ.26ຂໍພຣະນາມຂອງພຣະອົງຍິ່ງໃຫຍ່ຕະຫລອດນິລັນດອນ, ເພື່ອປະຊາຊົນຈະ
ໄດ້ກ່າວວ່າ, "ພຣະເຈົ້າຢາເວຈອມໂຢທາ ເປັນພຣະເຈົ້າຂອງອິດສະຣາເອນ" ຂະນະທີ່ເຊື້ອສາຍຂອງດາວິດ, ຜູ້ຮັບໃຊ້ຂອງພຣະອົງຈະຕັ້ງຫມັ້ນ
ຄົງຢູ່ຕໍ່ຫນ້າພຣະອົງ.
27ເພາະພຣະອົງ, ພຣະເຈົ້າຢາເວຈອມໂຢທາ, ພຣະເຈົ້າຂອງອິດສະຣາເອນ, ໄດ້ຊົງສຳແດງແກ່ຜູ້ຮັບໃຊ້ຂອງພຣະອົງ. ວ່າພຣະອົງຈະສ້າງເຊື້ອ
ສາຍໃຫ້ເຂົານັ້ນເປັນເຫດວ່າ, ຂ້ານ້ອຍ, ຜູ້ຮັບໃຊ້ຂອງພຣະອົງຈຶ່ງມີໃຈກ້າຫານຕໍ່ພຣະອົງ.28ບັດນີ້, ຂ້າແດ່ພຣະຢາເວ, ອົງພຣະຜູ້ເປັນເຈົ້າ, ພຣະ
ອົງຊົງເປັນພຣະເຈົ້າ, ແລະ ຖ້ອຍຄຳຂອງພຣະອົງຊົງວາງໃຈໄດ້, ແລະ ພຣະອົງໄດ້ຊົງເຮັດສັນຍາທີ່ດີນີ້ແກ່ຜູ້ຮັບໃຊ້ຂອງພຣະອົງ.29ສະນັ້ນ, ບັດນີ້
ຂໍຊົງອວຍພອນເຊື້ອສາຍຂອງຜູ້ຮັບໃຊ້ຂອງພຣະອົງ, ເພື່ອໃຫ້ດຳເນີນຢູ່ຕໍ່ຫນ້າພຣະອົງຕະຫລອດໄປ. ເພາະຂ້າແດ່ພຣະຢາເວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວສິ່ງເຫລົ່ານີ້ແລ້ວ, ແລະ ດ້ວຍພຣະພອນຂອງພຣະອົງ ກໍຂໍໃຫ້ເຊື້ອສາຍຜູ້ຮັບໃຊ້ຂອງພຣະອົງໄດ້ຮັບພຣະພອນຕະຫລອດໄປເປັນນິດ."


generated on Tue Jun 17 19:01:42 2025

8 1ຕໍ່ມາເຫດການນີ້ກໍໄດ້ເກີດຂຶ້ນ ດາວິດໄດ້ໂຈມຕີຄົນຟີລິດສະຕິນ ແລະ ໄດ້ເອົາຊະນະພວກເຂົາ. ດັ່ງນັ້ນດາວິດໄດ້ຍຶດເມືອງກັນ ແລະ ຫມູ່ບ້ານ
ຕ່າງໆຈາກການຄວບຄຸມຂອງຄົນຟີລິດສະຕິນ.

2ແລ້ວເພິ່ນຊິງເອົາຊະນະຄົນໂມອາບ ແລະ ໄດ້ບັງຄັບຄົນຂອງພວກເຂົາ ໃຫ້ລຽນເປັນແຖວຫນຶ່ງ ໂດຍໃຫ້ພວກເຂົານອນລົງພື້ນດິນ. ເພິ່ນໄດ້ແບ່ງ
ພວກເຂົາອອກເປັນສອງແຖວເພື່ອຂ້າ, ແລະ ອີກແຖວຫນຶ່ງໃຫ້ໄວ້ຊີວິດ. ດັ່ງນັ້ນຄົນໂມອາບກໍໄດ້ກາຍເປັນຂ້າຮັບໃຊ້ຂອງດາວິດ ແລະ ໄດ້ເລີ່ມນຳ
ເຄື່ອງມາຖວາຍເພິ່ນ.
3ແລ້ວດາວິດໄດ້ໂຈມຕີຮາດາເດລູກຊາຍຂອງເຣໂຮບ, ກະສັດເມືອງໂຊບາ, ທີ່ກະສັດຮາດາເດໄດ້ເດີນທາງໄປຟື້ນຟູອຳນາດຂອງເພິ່ນທີ່ແຄມແມ່
ນ້ຳເອີຟຣັດ. 4ດາວິດໄດ້ຍຶດລົດມ້າ ຫນຶ່ງພັນເຈັດຮ້ອຍຄັນ ແລະ ທະຫານສອງຫມື່ນຄົນຈາກເຂົາ. ດາວິດໄດ້ຕັດເອັນມ້າລົດເສິກທັງຫມົດ, ແຕ່ໃຫ້
ເຫລືອພຽງພໍໄວ້ ແກ່ລົດມ້າຕີເສິກແຕ່ຫນຶ່ງຮ້ອຍຄັນ.
5ເມື່ອຄົນອາຣາມ ຊາວເມືອງດາມັສກັດໄດ້ມາຊ່ວຍຮາດາເດເຊແຫ່ງໂຊບາ, ດາວິດກໍໄດ້ຂ້າຄົນອາຣາມຊາວສອງພັນຄົນ.
6ແລ້ວກະສັດດາວິດກໍໄດ້ຕັ້ງຄ້າຍທະຫານໄວ້ໃນດິນແດນຂອງອາຣາມ ຊາວເມືອງດາມັສກັດ, ແລະ ພວກເຂົາຈຶ່ງຕົກລົງຢູ່ໃຕ້ອຳນາດ
ກາຍເປັນຂ້າທາດ ແລະ ຍອມເສຍສວຍໃຫ້ເພິ່ນ. ພຣະຢາເວໄດ້ໃຫ້ດາວິດໄດ້ຮັບໄຊຊະນະທຸກບ່ອນທີ່ເພິ່ນໄປສູ້ຮົບ.
7ດາວິດໄດ້ຍຶດເອົາໂລ້ປ້ອງກັນທອງຄຳ ທີ່ທະຫານຂອງຮາດາເດເຊຖືນັ້ນ ແລະ ໄດ້ນຳທາງພວກເຂົາໄປນະຄອນເຢຣູຊາເລັມ. 8ຈາກເມືອງເບຕາ
ແລະ ເມືອງເບໂຣໄທ, ເມືອງຕ່າງໆຂອງຮາດາເດເອເຊ, ກະສັດດາວິດໄດ້ຍຶດເອົາທອງສຳຣິດຈຳນວນຫລາຍ.
9ເມື່ອໂຕອີ, ກະສັດແຫ່ງຮາມັດ, ໄດ້ຍິນວ່າດາວິດໄດ້ຕີເສິກຊະນະກອງທັບທັງຫລາຍຂອງຮາດາເດເຊ, 10ໂຕອີໄດ້ສົ່ງໂຢຣາມລູກຊາຍຂອງເພິ່ນໄປ
ເຝົ້າກະສັດດາວິດ ເພື່ອຖວາຍຄຳນັບ ແລະ ຖວາຍພະພອນຂອງເພິ່ນ, ເພາະດາວິດໄດ້ຊິງຕີເສິກກັບຮາດາເດເຊ, ແລະ ໄດ້ປາບປາມເຂົາລົງໄດ້,
ແລະ ເພາະວ່າຮາດາເດເຊໄດ້ເຮັດສົງຄາມ ກັບໂຕອີ. ຮາກີໂດຣັມກໍໄດ້ນຳຊັບສິນເງິນ, ຄຳ, ແລະ ທອງສຳຣິດໄປຖວາຍເພິ່ນດ້ວຍ.
11ກະສັດດາວິດໄດ້ມອບຖວາຍສິ່ງເຫລົ່ານີ້ແດ່ພຣະຢາເວ, ພ້ອມກັບເງິນ ແລະ ທອງຄຳຈາກປະຊາຊາດທັງຫລາຍທີ່ເພິ່ນໄດ້ຮັບໄຊຊະນະ - 12ນັບ
ຕັ້ງແຕ່ເອໂດມ, ໂມອາບ, ພວກປະຊາຊົນຂອງອຳໂມນ, ຄົນຟີລິດສະຕິນ, ແລະ ອາມາເຫລັກ, ແລະ ດ້ວຍສິນຄ້າທັງຫມົດທັງຫມົດທີ່ໄດ້ຍຶດມາ
ຈາກຮາດາເດເຊ ລູກຊາຍຂອງເຣໂຮບ, ກະສັດແຫ່ງໂຊບານັ້ນດ້ວຍ.
13ຊື່ຂອງດາວິດໄດ້ຊ່ຳລືກັນໄປເມື່ອເພິ່ນຊິງມີໄຊຊະນະເຫນືອພວກອາຣາມ ໃນພູເຂົາແຫ່ງເກືອ, ທີ່ມີຈຳນວນເຖິງຫນຶ່ງຫມື່ນແປດພັນຄົນ. 14ເພິ່ນ
ໄດ້ຕັ້ງກອງທັບທະຫານຮັກສາ ຢູ່ທົ່ວເມືອງເອໂດມ, ແລະ ຄົນເອໂດມທັງຫລາຍກໍເປັນຂ້າຮັບໃຊ້ຂອງດາວິດ. ພຣະຢາເວໄດ້ປຣະທານໄຊຊະນະ
ໃຫ້ແກ່ດາວິດໃນທຸກແຫ່ງທີ່ເພິ່ນໄດ້ໄປ.
15ດາວິດໄດ້ຊິງປົກຄອງອິດສະຣາເອນທັງຫລາຍ, ແລະເພິ່ນໄດ້ເຮັດຄວາມຍຸດຕິທຳແກ່ຊົນຊາດຂອງເພິ່ນທັງຫລາຍ. 16ໂຢອາບລູກຊາຍຂອງ ນາງ
ເຊຣູອີຢາໄດ້ເປັນແມ່ທັບ, ແລະເຢໂຮຊາຟັດລູກຊາຍຂອງອາຮີລຸດໄດ້ເປັນເຈົ້າຫນ້າທີ່ຜູ້ຈົດບັນທຶກ. 17ຊາດົກລູກຊາຍຂອງອາຮີລຸດ ແລະ ອາຮີເມ
ເຫລັກລູກຊາຍຂອງອາບີອາທາໄດ້ເປັນປະໂຣຫິດ, ແລະເສຣາອີຢາເປັນເລຂາທິການ. 18ເບເນອີຢາລູກຊາຍຂອງເຢໂຮຍອາດາເປັນຜູ້ບັງຄັບບັນຊາ
ຄົນເລວີ ແລະຄົນເປເລັດ, ແລະບັນດາລູກຊາຍຂອງດາວິດໄດ້ເປັນບັນດາຫົວຫນ້າທີ່ປຶກສາຂອງກະສັດ.

 generated on Tue Jun 17 19:01:42 2025

9 1ດາວິດໄດ້ເວົ້າວ່າ, "ຍັງມີເຊື້ອສາຍຜູ້ໃດຂອງໂຊນເຫລືອຢູ່ເພື່ອທີ່ເຮົາຈະສະແດງຄວາມຮັກຫມັ້ນຄົງແກ່ຜູ້ນັ້ນໂດຍເຫັນແກ່ໂຢນາທານ
?"2ມີຄົນຮັບໃຊ້ໃນເຊື້ອສາຍຂອງໂຊນຄົນຫນຶ່ງ ທີ່ຊື່ວ່າຊີບາ, ແລະ ພວກເຂົາໄດ້ເອີ້ນເຂົ້າມາພົບດາວິດ. ກະສັດໄດ້ເວົ້າກັບເຂົາວ່າ, "ເຈົ້າຄື
ຊີບາບໍ?" ເຂົາໄດ້ຕອບວ່າ, "ແມ່ນ. ຂ້ານ້ອຍຄືຜູ້ຮັບໃຊ້ຂອງທ່ານ." ດັ່ງນັ້ນ

3ດັ່ງນັ້ນກະສັດຈຶ່ງເວົ້າວ່າ, "ບໍ່ມີໃຜໃນເຊື້ອສາຍຂອງໂຊນເຫລືອຢູ່ແລ້ວບໍ ຜູ້ທີ່ເຮົາອາດຈະສະແດງຄວາມຮັກຫມັ້ນຄົງຂອງພຣະເຈົ້າຕໍ່ເຂົາ?" ຊີ
ບາໄດ້ຕອບກະສັດວ່າ, "ໂຢນາທານຍັງມີລູກຊາຍເຫລືອຢູ່ອີກຫນຶ່ງ, ຜູ້ທີ່ຕີນຂອງລາວພິການ."4ກະສັດໄດ້ຖາມເຂົາວ່າ, "ເຂົາຢູ່ໃສ?" ຊີບາຈຶ່ງໄດ້
ຕອບກະສັດວ່າ, "ເຂົາຢູ່ໃນບ້ານຂອງມາກີລູກຊາຍຂອງອຳມີເອນ ໃນເມືອງໂລເດບາ."
5ແລ້ວກະສັດດາວິດໄດ້ສົ່ງຄົນໄປນຳເຂົາມາຈາກບ້ານຂອງມາກີລູກຊາຍຂອງອຳມີເອນ ທີ່ໂລເດບາ.6ດັ່ງນັ້ນເມຟີໂບເຊັດລູກຊາຍຂອງໂຢນາທານ
ລູກຊາຍຂອງກະສັດໂຊນ, ກໍໄດ້ມາເຝົ້າດາວິດ ແລະ ຄຸກເຂົ່າກົ້ມຫນ້າລົງພື້ນເພື່ອນົບດາວິດ ດາວິດຕອບວ່າ, "ນີ້ແມ່ນເມຟີໂບເຊັດຫວ່ານີ້." ເຂົາ
ໄດ້ຕອບວ່າ. "ໂອເບິ່ງແມ, ພຣະເຈົ້າຂອງຂ້ານ້ອຍ, ຂ້ານ້ອຍເປັນຜູ້ຮັບໃຊ້ຂອງທ່ານ!"
7ດາວິດໄດ້ຕອບວ່າ, "ຢ່າຢ້ານເລີຍ, ເພາະເຮົາຈະສະແດງຄວາມຮັກຫມັ້ນຄົງຕໍ່ເຈົ້າແນ່ນອນ ເພື່ອເຫັນແກ່ໂຢນາທານພໍ່ຂອງເຈົ້າ, ແລະເຮົາຈະ
ຄືນທີ່ດິນທັງຫມົດຂອງໂຊນປູ່ຂອງເຈົ້າແກ່ເຈົ້າ, ແລະເຈົ້າຈະຮັບປະທານອາຫານຢູ່ທີ່ໂຕະຂອງເຮົາສະເຫມີໄປ."8ເມຟີໂບເຊັດກໍໄດ້ຄຸກເຂົ່າລົງຄຳ
ນັບ ແລະໄດ້ທູນວ່າ, "ຜູ້ຮັບໃຊ້ຂອງທ່ານແມ່ນຜູ້ໃດ,? ຊຶ່ງທ່ານຈະຊົງເຫັນດ້ວຍຄວາມຊື່ນຊົມກັບຫມາທີ່ຕາຍແລ້ວຢ່າງຂ້ານ້ອຍນີ້?"
9ແລ້ວກະສັດໄດ້ເອີ້ນຊີບາ, ຄົນຮັບໃຊ້ຂອງໂຊນ, ແລະໄດ້ເວົ້າກັບເຂົາວ່າ, "ສິ່ງຂອງທັງຫມົດທີ່ເປັນຂອງໂຊນ ແລະຂອງພົງພັນຂອງເພິ່ນເຮົາໄດ້
ມອບໃຫ້ແກ່ຫລານເຈົ້ານາຍຂອງເຈົ້າແລ້ວ.10ໂຕເຈົ້າ. ແລະບັນດາລູກຊາຍຂອງເຈົ້າ, ແລະຄົນໃຊ້ຂອງເຈົ້າຈະຕ້ອງໄຖນາໃຫ້ເຂົາ ແລະເຈົ້າຈະຕ້
ັອງເກັບກ່ຽວຜົນນັ້ນມາເພື່ອລູກຊາຍແຫ່ງເຈົ້ານາຍເຈົ້າຈະໄດ້ມີອາຫານກິນ. ສຳລັບເມຟີໂບເຊັດຫລານເຈົ້ານາຍເຈົ້າ, ຈະຕ້ອງກິນອາຫານທີ່
ໂຕະຂອງເຮົາສະເຫມີໄປ." ບາດນີ້ຊີບາມີລູກຊາຍສິບຫ້າຄົນ ແລະຄົນຮັບໃຊ້ຊາວຄົນ.
11ແລ້ວຊີບາຈຶ່ງໄດ້ທູນກະສັດວ່າ, "ຜູ້ຮັບໃຊ້ຂອງທ່ານຈະເຮັດທຸກສິ່ງກະສັດເຈົ້ານາຍຂອງຂ້ານ້ອຍໄດ້ຊົງມີຄຳສັ່ງແກ່ຜູ້ຮັບໃຊ້ເພິ່ນ." ກະສັດໄດ້
ເວົ້າຕໍ່ອີກວ່າ, "ສຳລັບເມຟີໂບເຊັດ ເຂົາຈະຮັບປະທານທີ່ໂຕະກິນເຂົ້າຂອງເຮົາ, ເຊັ່ນດຽວກັນກັບລູກຊາຍຂອງກະສັດຫນຶ່ງ."12ເມຟີໂບເຊັດໄດ້ມີ
ລູກຊາຍນ້ອຍຄົນຫນຶ່ງຊື່ວ່າມີກາ. ທຸກຄົນໄດ້ອາໄສຢູ່ໃນບ້ານຂອງຊີບາກໍໄດ້ເປັນຄົນຮັບໃຊ້ຂອງເມຟີໂບເຊັດ.13ດັ່ງນັ້ນເມຟີໂບເຊັດຈຶ່ງໄດ້ອາໄສຢູ່
ໃນນະຄອນເຢຣູຊາເລັມ, ແລະເຂົາໄດ້ກິນອາຫານທີ່ໂຕະເກົາສະເຫມີ, ເຖິງແມ່ນວ່າຕີນຂອງເຂົາຈະພິການ.


generated on Tue Jun 17 19:01:42 2025

10 [1]ສິ່ງນີ້ກໍໄດ້ເກີດຂຶ້ນຫລັງຈາກທີ່ກະສັດແຫ່ງຄົນອຳໂມນ, ໄດ້ຮານູນລູກຊາຍຂອງເພິ່ນກໍໄດ້ຊົງຂຶ້ນເປັນກະສັດແທນເພິ່ນ.[2]ດາວິດຈຶ່ງໄດ້ກ່າວ
ວ່າ, "ເຮົາຈະສະແດງນ້ຳໃຈຕໍ່ຮານູນລູກຊາຍນາຮາດ, ດັ່ງທີ່ພໍ່ຂອງເຂົາໄດ້ຊົງສະແດງຄວາມກະລຸນາຕໍ່ເຮົາ." ດາວິດຈຶ່ງໄດ້ສົ່ງພວກຂ້າ
ຣາຊການຂອງເພິ່ນໄປສະແດງຄວາມເສຍໃຈຕໍ່ຮານູນ ກ່ຽວດ້ວຍເລື່ອງພໍ່ຂອງເຂົາ. ພວກຄົນຮັບໃຊ້ຂອງດາວິດກໍເຂົ້າມາໃນແຜ່ນດິນຂອງປະຊາ
ຊົນອຳໂມນ.[3]ແຕ່ພວກຜູ້ນຳຂອງຄົນອຳໂມນໄດ້ບອກຮານູນເຈົ້ານາຍຂອງພວກເຂົາວ່າ, "ທ່ານຊົງຄິດວ່າດາວິດຊົງໃຫ້ກຽດພໍ່ຂອງທ່ານແທ້ໆ ຫລື
ທີ່ເຂົາໄດ້ສົ່ງພວກຄົນເຫລົ່ານັ້ນມາເພື່ອຊົງສະແດງຄວາມເສຍໃຈຕໍ່ທ່ານ? ດາວິດບໍ່ໄດ້ສົ່ງພວກຂ້າຣາຊການຂອງເຂົາມາຫາທ່ານເພື່ອກວດສອບ
ເມືອງ ເພື່ອສອດແນມ, ແລະເພື່ອຈະເອົາເມືອງນີ້ບໍ່?"

[4]ດັ່ງນັ້ນຮານູນຈຶ່ງໄດ້ຈັບພວກຄົນຮັບໃຊ້ຂອງດາວິດມາແຖຫນວດເຄິ່ງຫນຶ່ງ, ແລະ ໄດ້ຕັດເຄື່ອງແຕ່ງກາຍພວກເຂົາອອກຈົນເຖິງສະໂພກຂອງ
ພວກເຂົາ, ແລະ ໄດ້ປ່ອຍໄປ.[5]ເມື່ອພວກເຂົາໄດ້ອະທິບາຍເລື່ອງນີ້ໃຫ້ດາວິດໄດ້ຊົງຮູ້, ພະອົງກໍໄດ້ຊົງສົ່ງຄົນໄປພົບເຂົາເຫລົ່ານັ້ນ, ເພາະວ່າພວກ
ເຂົາໄດ້ຮັບຄວາມອັບອາຍຫລາຍ. ກະສັດໄດ້ກ່າວວ່າ, “ຈົ່ງພັກທີ່ເມືອງເຢຣີໂກ ຈົນກວ່າຫນວດຂອງພວກເຈົ້າໄດ້ປົ່ງຂຶ້ນຄືນ, ແລ້ວຈຶ່ງຄ່ອຍກັບ
ມາ.”
[6]ເມື່ອປະຊາຊົນອຳໂມນໄດ້ເຫັນວ່າ ພວກເຂົາໄດ້ສ້າງສັດຕູກັບດາວິດ, ປະຊາຊົນອຳໂມນຈຶ່ງໄດ້ສົ່ງຜູ້ສື່ສານໄປຈ້າງຄົນອາຣາມ ເມືອງເບັດເຣໂຮບ
ແລະໂຊບາ, ເປັນທະຫານຈຳນວນສອງຫມື່ນຄົນ, ແລະ ກະສັດເມືອງມາອາກາພ້ອມດ້ວຍກຳລັງຄົນ ຫນຶ່ງພັນຄົນ, ແລະກຳລັງຄົນເມືອງໂຕບ
ຫນຶ່ງຫມື່ນສອງພັນຄົນ.[7]ເມື່ອດາວິດໄດ້ຍິນເລື່ອງນີ້, ເຂົາຈຶ່ງສົ່ງໂຢອາບ ແລະກອງທັບເຫລົ່ານັກລົບທັງຫມົດໄປ.[8]ພວກຄົນອຳໂມນກໍໄດ້ຍົກທັບ
ອອກມາ ແລະ ໄດ້ຈັດແນວຮົບໄວ້ທີ່ທາງເຂົ້າປະຕູເມືອງຂອງພວກເຂົາ, ໃນຂະນະທີ່ຄົນອາຣາມຈາກໂຊບາ ແລະ ຈາກເມືອງເຣໂຮບ, ແລະຊາວ
ເມືອງໂຕບ ແລະຊາວເມືອງມາອາກາ, ຢູ່ທີ່ພື້ນທີ່ໂລ່ງສະເພາະພວກເຂົາ.
[9]ເມື່ອໂຢອາບໄດ້ເຫັນວ່າ ການສູ້ຮົບນັ້ນປະເຊີນຫນ້າເຂົາ ຢູ່ທັງຂ້າງຫນ້າ ແລະຂ້າງຫລັງ, ເຂົາຈຶ່ງໄດ້ເລືອກຈາກຄົນອິດສະຣາເອນທັງຫມົດ ທີ່
ເກັ່ງທີ່ສຸດໃນການສູ້ຮົບ ແລະໄດ້ຈັດພວກເຂົາໄວ້ ແລ້ວເພື່ອຕໍ່ສູ້ຄົນອາຣາມ.[10]ສຳລັບພວກທະຫານທີ່ເຫລືອຢູ່ໃນກອງທັບ, ເຂົາໄດ້ຈັດໄວ້ໃຫ້ຢູ່ໃນ
ບັງຄັບບັນຊາຂອງອາບີໄຊ ນ້ອງຊາຍຂອງເຂົາເອງ, ແລະ ເຂົາກໍໄດ້ຈັດຄົນເຫລົ່ານັ້ນ ເຂົ້າຕໍ່ສູ້ກັບກອງທັບຂອງຄົນອຳໂມນ.
[11]ໂຢອາບໄດ້ກ່າວວ່າ, "ອາບີໄຊ, ຖ້າຄົນອາຣາມແຂງແຮງກວ່າກຳລັງຂອງເຮົາ, ກໍໃຫ້ເຈົ້າໄປຊ່ວຍເຮົາ. ແຕ່ຖ້າກຳລັງຄົນອຳໂມນແຂງແຮງກວ່າ
ກຳລັງຂອງເຈົ້າ, ແລ້ວເຮົາຈະມາ ແລະຊ່ວຍເຈົ້າ.[12]ຈົ່ງເຂັ້ມແຂງໄວ້, ແລະ ຈົ່ງໃຫ້ເຮົາສະແດງຄວາມເຂັ້ມແຂງຂອງພວກເຮົາ ເພື່ອປະຊາຊົນຂອງ
ເຮົາ ແລະ ເພື່ອບັນດາເມືອງຕ່າງໆ ຂອງພຣະເຈົ້າຂອງເຮົາ, ເພື່ອພຣະຢາເວຈະໄດ້ຊົງເຮັດຕາມທີ່ພຣະອົງຊົງເຫັນຊອບ ຕາມພຣະປະສົງຂອງພ
ຣະອົງ."
[13]ດັ່ງນັ້ນໂຢອາບ ກັບພວກທະຫານຂອງກອງທັບຂອງເຂົາ ກໍໄດ້ບຸກເຂົ້າໄປສູ້ຮົບຕ້ານກັບຄົນອາຣາມ, ທີ່ໄດ້ຖືກກົດດັນໃຫ້ຫນີໄປຕໍ່ຫນ້າກອງທັບ
ຂອງອິດສະຣາເອນ.[14]ເມື່ອກອງທັບຂອງຄົນອຳໂມນໄດ້ເຫັນວ່າ ຄົນອາຣາມໄດ້ຫນີໄປແລ້ວ, ພວກເຂົາກໍໄດ້ຫນີໄປຈາກອາບີໄຊດ້ວຍ ແລະ ໄດ້
ກັບເຂົ້າໄປໃນເມືອງ. ແລ້ວໂຢອາບກໍໄດ້ກັບຈາກການສູ້ຮົບກັບປະຊາຊົນອຳໂມນ ແລະໄດ້ກັບໄປຍັງກຸງເຢຣູຊາເລັມ.
[15]ເມື່ອຄົນອາຣາມໄດ້ເຫັນວ່າ ພວກເຂົາໄດ້ພ່າຍແພ້ຕໍ່ຄົນອິດສະຣາເອນແລ້ວ, ພວກເຂົາຈຶ່ງລວມຕົວເຂົ້າດ້ວຍກັນອີກຄັ້ງຫນຶ່ງ.[16]ແລ້ວຮາດາເດເຊ
ໄດ້ສົ່ງຄົນໄປນຳກອງທະຫານອາຣາມຈາກອີກຟາກຫນຶ່ງຂອງແມ່ນ້ຳເອີຟຣັດ. ພວກເຂົາໄດ້ມາຍັງເມືອງເຮລາມ ໂດຍມີໂຊບັກ, ແມ່ທັບຂອງຮາ
ດາເດເຊນຳຫນ້າພວກເຂົາໄປ.
[17]ເມື່ອດາວິດໄດ້ຮັບຮູ້ໃນເລື່ອງນີ້, ພະອົງໄດ້ຊົງຮວບຮວມຊາວອິດສະຣາເອນທັງຫມົດ, ໄດ້ຂ້າມແມ່ນ້ຳຈໍແດນ, ແລະໄດ້ມາເຖິງເຮລາມ. ຄົນ
ອາຣາມກໍໄດ້ຈັດແນວຮົບຂອງພວກເຂົາ ເຂົ້າຕໍ່ສູ້ດາວິດ ແລະ ໄດ້ສູ້ຮົບກັບພະອົງ.[18]ຄົນອາຣາມໄດ້ຫນີຈາກອິດສະຣາເອນ. ດາວິດໄດ້ປະຫານ
ຄົນອາຣາມ ຊຶ່ງເປັນທະຫານລົດມ້າເສິກເຈັດຮ້ອຍຄົນ ແລະ ທະຫານມ້າສີ່ຫມື່ນຄົນ. ໂຊບັກແມ່ທັບຂອງພວກເຂົາໄດ້ຮັບບາດເຈັບ ແລະຕາຍຢູ່ທີ່
ນັ້ນ.[19]ເມື່ອບັນດາກະສັດພວກຜູ້ຮັບໃຊ້ຂອງຮາດາເດເຊເຫັນວ່າ ພວກເຂົາໄດ້ພ່າຍແພ້ຕໍ່ອິດສະຣາເອນ, ພວກເຂົາກໍໄດ້ເຮັດສັນຍາສະຫງົບເສິກ
ກັບອິດສະຣາເອນ ແລະ ໄດ້ຍອມຮັບໃຊ້ພວກເຂົາ. ດັ່ງນັ້ນຄົນອາຣາມຈຶ່ງຢ້ານທີ່ຈະຊ່ວຍປະຊາຊົນຂອງຄົນອຳໂມນອີກຕໍ່ໄປ.

 generated on Tue Jun 17 19:01:42 2025

11 1ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນໃນລະດູໃບໄມ້ປົ່ງ, ໃນເວລາທີ່ບັນດາກະສັດໂດຍປົກກະຕິກໍໄດ້ອອກໄປຮົບ, ດາວິດໄດ້ຊົງສົ່ງໂຢອາບ,ພ້ອມກັບພວກ
ທະຫານ, ແລະກອງທັບຂອງອິດສະຣາເອນທັງຫມົດ. ພວກເຂົາໄດ້ໄປທຳລາຍກອງທັບຂອງຄົນອຳໂມນ ແລ້ວລ້ອມເມືອງຣັບບາໄວ້. ແຕ່ດາ
ວິດໄດ້ຢູ່ທີ່ນະຄອນເຢຣູຊາເລັມ.

2ດັ່ງນັ້ນມັນກໍໄດ້ເກີດຂຶ້ນໃນເວລາບ່າຍວັນຫນຶ່ງ ເມື່ອດາວິດໄດ້ຊົງລຸກຂຶ້ນຈາກທີ່ນອນຂອງເພິ່ນ ແລະໄດ້ຍ່າງຢູ່ເທິງດາດຟ້າຫລັງຄາ ຂອງຣາຊວັງ
ຂອງເພິ່ນ. ຈາກທີ່ນັ້ນເພິ່ນໄດ້ເຫັນຜູ້ຍິງຄົນຫນຶ່ງໄດ້ກຳລັງອາບນ້ຳຢູ່, ແລະຜູ້ຍິງຄົນນັ້ນງົດງາມຫລາຍ.3ດັ່ງນັ້ນດາວິດໄດ້ຊົງສົ່ງຄົນໄປ ແລະໄດ້
ຖາມຄົນທັງຫລາຍ ທີ່ຮູ້ເລື່ອງກ່ຽວກັບຜູ້ຍິງຄົນນັ້ນ. ບາງຄົນໄດ້ທູນວ່າ, "ອາຣາຜູ້ຍິງນີ້ຄືບັດເຊບາ, ລູກສາວຂອງເອລີອາມ, ແລະນາງເປັນເມຍ
ຂອງອູຣີຢາຄົນຮິດຕີບໍ່ແມ່ນບໍ?"
4ດາວິດກໍໄດ້ຊົງສົ່ງພວກຜູ້ສື່ສານໄປ ແລະກໍໄດ້ນຳນາງມາ, ນາງໄດ້ມາເຝົ້າເພິ່ນ, ແລ້ວເພິ່ນກໍໄດ້ຊົງຫລັບນອນກັບນາງ (ເພາະວ່ານາງຫາກໍເສັດ
ສິ້ນພິທີຊຳລະຕົວ ຫລັງຈາກເຊົາເປັນປະຈຳເດືອນແລ້ວ). ແລ້ວນາງກໍໄດ້ກັບໄປບ້ານຂອງນາງ.5ຜູ້ຍິງນັ້ນກໍໄດ້ຖືພາ, ແລະນາງຈຶ່ງໄດ້ສົ່ງຄົນໄປ
ແລະໄດ້ບອກດາວິດ, ນາງໄດ້ບອກວ່າ, "ຂ້ານ້ອຍຖືພາແລ້ວ."
6ດາວິດກໍໄດ້ຊົງສົ່ງຄົນໄປຫາໂຢອາບບອກວ່າ, "ຈົ່ງສົ່ງອູຣີຢາຄົນຮິດຕີມາໃຫ້ເຮົາ." ດັ່ງນັ້ນໂຢອາບກໍໄດ້ສົ່ງອູຣີຢາໄປໃຫ້ດາວິດ.7ດາວິດກໍໄດ້ຮັບ
ສັ່ງວ່າໂຢອາບເປັນຢ່າງໃດ, ກອງທັບເປັນຢ່າງໃດແດ່, ແລະສົງຄາມເປັນຢ່າງໃດ.8ດາວິດໄດ້ຮັບສັ່ງກັບອູຣີຢາວ່າ, "ຈົ່ງລົງໄປບ້ານຂອງເຈົ້າ, ແລະ
ໃຫ້ລ້າງຕີນຂອງເຈົ້າເຖີດ." ດັ່ງນັ້ນອູຣີຢາກໍໄດ້ອອກໄປຈາກຣາຊວັງຂອງກະສັດ, ແລະກະສັດໄດ້ຊົງສົ່ງຂອງປະທານໄປໃຫ້ອູຣີຢາຫລັງຈາກທີ່
ເຂົາໄດ້ຈາກໄປແລ້ວ.
9ແຕ່ອູຣີຢາໄດ້ນອນທີ່ປະຕູຣາຊວັງຂອງກະສັດ ພ້ອມກັບມະຫາເລັກທັງຫມົດຂອງນາຍຂອງເຂົາ, ແລະເຂົາບໍ່ໄດ້ລົງໄປທີ່ບ້ານຂອງເຂົາ.10ເມື່ອ
ພວກເຂົາໄດ້ທູນດາວິດວ່າ, "ອູຣີຢາບໍ່ໄດ້ລົງໄປທີ່ບ້ານຂອງເຂົາ," ດາວິດກໍໄດ້ຮັບສັ່ງແກ່ອູຣີຢາວ່າ, "ເຈົ້າເດີນທາງມາບໍ່ແມ່ນບໍ? ເປັນຫຍັງເຈົ້າບໍ່
ລົງໄປບ້ານຂອງເຈົ້າ?"11ອູຣີຢາໄດ້ທູນຕອບດາວິດວ່າ, "ຫີບພັນທະສັນຍາ, ແລະອິດສະຣາເອນ ແລະຢູດາຢູ່ໃນເຕັນ ແລະໂຢອາບຂອງຂ້ານ້ອຍ,
ກັບບັນດາຂ້າຣາຊການຂອງເຈົ້ານາຍຂອງຂ້ານ້ອຍໄດ້ຕັ້ງຄ້າຍຢູ່ທີ່ພື້ນທີ່ໂລ່ງ ແລ້ວຂ້ານ້ອຍເອງຈະໄປທີ່ບ້ານຂອງຂ້ານ້ອຍເພື່ອກິນ, ດື່ມ ແລະ
ນອນກັບເມຍຂອງຂ້ານ້ອຍໄດ້ຢ່າງໃດ? ຕາບໃດທ່ານຍັງມີຊີວິດຢູ່, ຂ້ານ້ອຍຈະບໍ່ເຮັດຢ່າງນີ້ເລີຍ."
12ດັ່ງນັ້ນດາວິດກໍໄດ້ຮັບສັ່ງແກ່ອູຣີຢາວ່າ, "ມື້ນີ້ກໍໃຫ້ພັກຢູ່ທີ່ນີ້ເຖີດ, ແລະມື້ອື່ນເຮົາຈະໃຫ້ເຈົ້າໄປ." ດັ່ງນັ້ນອູຣີຢາກໍໄດ້ພັກຢູ່ໃນນະຄອນເຢຣູຊາ
ເລັມໃນມື້ນັ້ນ ແລະມື້ຕໍ່ມາ.13ເມື່ອດາວິດໄດ້ຊົງຮ້ອງເຂົາມາ ເຂົາກໍໄດ້ມາຮັບປະທານ, ແລະດື່ມຕໍ່ຫນ້າເພິ່ນ, ແລະດາວິດໄດ້ຊົງເຮັດໃຫ້ເຂົາມຶນ
ເມົາ. ໃນຕອນບ່າຍອູຣີຢາກໍໄດ້ອອກໄປນອນໃນທີ່ນອນກັບພວກຂ້າຣາຊການຂອງເຈົ້ານາຍຂອງເຂົາ, ເຂົາບໍ່ໄດ້ລົງໄປບ້ານຂອງເຂົາ.
14ດັ່ງນັ້ນພໍເຊົ້າວັນໃຫມ່ ດາວິດໄດ້ຊົງຂຽນສານເຖິງໂຢອາບ, ແລະໄດ້ສົ່ງໄປກັບມືອູຣີຢາ.15ດາວິດໄດ້ຊົງຂຽນໃນສານນັ້ນວ່າ, "ຈົ່ງຕັ້ງອູຣີຢາໃຫ້ຢູ່
ແນວຫນ້າຂອງການຮົບທີ່ດຸເດືອດທີ່ສຸດ, ແລ້ວໃຫ້ພວກເຈົ້າຖອຍໄປຈາກເຂົາ, ເພື່ອໃຫ້ເຂົາຖືກຕີ ແລະຖືກຂ້າຕາຍ."
16ເຂົາຈຶ່ງໄດ້ກຳນົດໃຫ້ອູຣີຢາໄປທີ່ ທີ່ເຂົາໄດ້ຮູ້ວ່າມີພວກທະຫານຂອງພວກສັດຕູທີ່ເຂັ້ມແຂງທີ່ສຸດທີ່ກຳລັງສູ້ຮົບຢູ່.17ເມື່ອຄົນຂອງເມືອງນັ້ນໄດ້
ອອກມາສູ້ຮົບກັບກອງທັບຂອງໂຢອາບ, ມີທະຫານບາງຄົນຂອງດາວິດໄດ້ລົ້ມຕາຍ, ແລະອູຣີຢາກໍໄດ້ຖືກຂ້າຕາຍທີ່ນັ້ນດ້ວຍ.
18ເມື່ອໂຢອາບໄດ້ສົ່ງຖ້ອຍຄຳໄປທູນດາວິດເລື່ອງລາວການຮົບທັງຫມົດໃຫ້ຊົງຮູ້ກ່ຽວກັບສົງຄາມ,19ເຂົາໄດ້ສັ່ງຜູ້ສື່ສານນັ້ນວ່າ, "ເມື່ອເຈົ້າທູນ
ເລື່ອງລາວການຮົບທັງຫມົດຕໍ່ກະສັດແລ້ວ,20ອາດຈະເກີດຂຶ້ນໄດ້ວ່າ ກະສັດໄດ້ໃຈຮ້າຍຂຶ້ນມາ, ແລະພະອົງໄດ້ຖາມເຈົ້າວ່າ, "ເປັນຫຍັງພວກເຈົ້າ
ຈຶ່ງໄດ້ເຂົ້າສູ້ຮົບໃກ້ເມືອງນັ້ນ? ພວກເຈົ້າບໍ່ຮູ້ຫລືວ່າພວກເຂົາຈະຍິງຈາກກຳແພງ?
21ໃຜຂ້າອາບີເມເຫລັກລູກຊາຍຂອງກິເດໂອນ? ບໍ່ແມ່ນຜູ້ຍິງຄົນຫນຶ່ງເອົາຫີນໂມ້ທຸ້ມເຂົາຈາກກຳແພງເມືອງ, ດັ່ງນັ້ນເຂົາໄດ້ຕາຍທີ່ເມືອງເທເບັດ
ບໍ? ເປັນຫຍັງພວກເຈົ້າຈຶ່ງເຂົ້າໄປໃກ້ກຳແພງ?" ແລ້ວໃຫ້ເຈົ້າທູນວ່າ, "ອູຣີຢາຄົນຮິດຕີຜູ້ຮັບໃຊ້ຂອງທ່ານກໍໄດ້ຕາຍດ້ວຍ.""
22ດັ່ງນັ້ນຜູ້ສື່ສານກໍໄດ້ຈາກໄປ ເຂົາໄດ້ມາເຝົ້າດາວິດ ແລະໄດ້ບອກເພິ່ນໃຫ້ຊົງຮູ້ທຸກຢ່າງຕາມທີ່ໂຢອາບໄດ້ສັ່ງເຂົາມາ.23ແລ້ວຜູ້ສື່ສານນັ້ນກໍໄດ້
ທູນດາວິດວ່າ, "ພວກສັດຕູມີກຳລັງເຫນືອເຮົາໃນຕອນແລກ, ພວກເຂົາໄດ້ອອກມາສູ້ກັບເຮົາທີ່ກາງທົ່ງນາ, ແຕ່ເຮົາໄດ້ໄລ່ພວກເຂົາໃຫ້ກັບໄປເຖິງ
ທາງເຂົ້າປະຕູເມືອງ.
24ແລ້ວຍິງທະນູຂອງພວກເຂົາກໍໄດ້ຍິງເຫລົ່າທະຫານຂອງທ່ານຈາກກຳແພງ, ແລະທະຫານຂອງກະສັດບາງຄົນກໍໄດ້ຕາຍ, ແລະອູຣີຢາຄົນຮິດຕີ
ຜູ້ຮັບໃຊ້ຂອງທ່ານກໍໄດ້ຕາຍດ້ວຍ."25ແລ້ວດາວິດກໍໄດ້ຮັບສັ່ງຜູ້ສື່ສານນັ້ນວ່າ“ຈົ່ງກ່າວກັບໂຢອາບວ່າ, "ຢ່າໃຫ້ເລື່ອງນີ້ເຮັດໃຫ້ເຈົ້າທຸກໃຈ, ເພາະ
ດາບສັງຫານບໍ່ວ່າຄົນນັ້ນຫລືຄົນນີ້. ຈົ່ງສູ້ຮົບໃຫ້ເຂັ້ມແຂງ, ແລະໃຫ້ເຂັ້ມແຂງຍິ່ງຂຶ້ນເພື່ອຕໍ່ສູ້ເມືອງນັ້ນ, ແລະທຳລາຍໃຫ້ໄດ້’ ແລະໄດ້ໃຫ້ກຳລັງ
ໃຈເຂົາ."
26ດັ່ງນັ້ນເມື່ອເມຍຂອງອູຣີຢາໄດ້ຮູ້ວ່າ ອູຣີຢາຜົວຂອງນາງໄດ້ຕາຍແລ້ວ, ນາງກໍໄດ້ຮ້ອງໄຫ້ຢ່າງຫນັກເລື່ອງຜົວຂອງນາງ.27ເມື່ອການໄວ້ທຸກຂອງ
ນາງໄດ້ຜ່ານໄປແລ້ວ, ດາວິດກໍໄດ້ສົ່ງຄົນໃຫ້ໄປຮັບນາງມາທີ່ຣາຊວັງຂອງເພິ່ນ, ແລະໄດ້ເກີດລູກຊາຍຄົນຫນຶ່ງໃຫ້ເພິ່ນ. ແຕ່ສິ່ງຊຶ່ງດາວິດໄດ້ຊົງ
ເຮັດນັ້ນບໍ່ເປັນທີ່ພໍໃຈຂອງພຣະຢາເວ.

 generated on Tue Jun 17 19:01:42 2025

12 1ແລ້ວພຣະຢາເວຊົງໃຊ້ນາທານໄປຫາດາວິດ. ນາທານກໍໄດ້ໄປເຝົ້າ ແລະທູນເພິ່ນວ່າ, "ຍັງມີຜູ້ຊາຍສອງຄົນ, ອາໄສຢູ່ໃນເມືອງຫນຶ່ງຜູ້
ຊາຍຄົນຫນຶ່ງຮັ່ງມີ ແລະອີກຄົນຫນຶ່ງຍາກຈົນ.2ຜູ້ຊາຍຄົນຮັ່ງມີນັ້ນມີແພະແກະ ແລະງົວຫລວງຫລາຍ,3ແຕ່ຜູ້ຊາຍຄົນຍາກຈົນນັ້ນບໍ່ມີຫຍັງ
ເລີຍ ເວັ້ນແຕ່ແກະໂຕແມ່ໂຕນ້ອຍໆ ໂຕດຽວທີ່ເຂົາໄດ້ຊື້ມາ, ຊຶ່ງເຂົາໄດ້ລ້ຽງໄວ້ມັນໄດ້ເຕີບໂຕມາກັບເຂົາ ແລະບັນດາລູກທັງຫລາຍຂອງເຂົາ ມັນ
ໄດ້ກິນອາຫານຮ່ວມກັບເຂົາດ້ວຍ. ແລະໄດ້ດື່ມຈາກຖ້ວຍດຽວກັບເຂົາ, ແລະມັນໄດ້ນອນໃນອົກຂອງເຂົາ ແລະເປັນເຫມືອນລູກສາວຂອງເຂົາ.

4ມື້ຫນຶ່ງມີແຂກຄົນຫນຶ່ງ ໄດ້ເດີນທາງມາຫາຄົນຮັ່ງມີ, ແຕ່ຄົນຮັ່ງມີບໍ່ເຕັມໃຈທີ່ຈະເອົາສັດຈາກຝູງງົວ ແລະແກະຂອງເຂົາມາເຮັດອາຫານ ສໍາ
ຫລັບລ້ຽງແຂກ ເຂົາຈຶ່ງໄດ້ເອົາລູກແກະໂຕແມ່ຂອງຄົນຈົນ ແລະຕຽມເປັນອາຫານໃຫ້ແກ່ແຂກຂອງເຂົາ."5ດາວິດກໍໄດ້ໃຈຮ້າຍຜູ້ຊາຍທີ່ຮັ່ງມີຄົນ
ນັ້ນຫລາຍ, ແລະໄດ້ຮັບສັ່ງແກ່ນາທານວ່າ, "ພຣະຢາເວຊົງມີຊີວິດ, ຜູ້ຊາຍຄົນທີ່ເຮັດເຊັ່ນນັ້ນສົມຄວາມຕາຍ.6ເຂົາຈະຕ້ອງຊົດໃຊ້ຄືນລູກແກະ
ໃຫ້ສີ່ເທົ່າເພາະເຂົາໄດ້ເຮັດສິ່ງນີ້, ແລະເພາະວ່າເຂົາບໍ່ມີຄວາມເມດຕາຕໍ່ຜູ້ຊາຍທີ່ຍາກຈົນ."
7ນາທານຈຶ່ງໄດ້ທູນດາວິດວ່າ, "ທ່ານນັ້ນແຫລະຄືຜູ້ຊາຍຄົນນັ້ນ, ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນໄດ້ກ່າວວ່າ, "ເຮົາໄດ້ແຕ່ງຕັ້ງເຈົ້າໄວ້
ໃຫ້ປັນກະສັດເຫນືອອິດສະຣາເອນ, ແລະເຮົາໄດ້ຊ່ວຍກູ້ເຈົ້າໃຫ້ພົ້ນຈາກມືຂອງໂຊນ.8ເຮົາໄດ້ມອບຣາຊວັງເຈົ້ານາຍຂອງເຈົ້າໃຫ້ເຈົ້າ, ແລະໄດ້
ມອບເຫລົ່າເມຍຂອງເຈົ້ານາຍຂອງເຈົ້າໄວ້ໃນອ້ອມແຂນຂອງເຈົ້າ. ເຮົາໄດ້ມອບວົງວານຂອງອິດສະຣາເອນ ແລະຢູດາຍ,ໃຫ້ແກ່ເຈົ້າດ້ວຍເຊັ່ນ
ກັນ, ແຕ່ຖ້າເທົ່ານີ້ຍັງນ້ອຍເກີນໄປ ເຮົາຈະເພີ່ມໃຫ້ຫລວງຫລາຍກ່ອນນີ້.
9ດັ່ງນັ້ນເປັນຫຍັງເຈົ້າເຖິງໄດ້ດູຫມິ່ນ ພຣະບັນຊາຂອງພຣະຢາເວ, ໄດ້ເຮັດສິ່ງທີ່ຊົ່ວໃນສາຍຕາພຣະອົງ? ເຈົ້າໄດ້ປະຫານອູຣີຢາຄົນຮິດຕີດ້ວຍ
ດາບ ແລະໄດ້ເອົາເມຍຂອງເຂົາມາເປັນເມຍຂອງເຈົ້າ. ເຈົ້າໄດ້ຂ້າເຂົາດ້ວຍດາບຂອງກອງທັບຂອງຄົນອໍາໂມນ.10ດັ່ງນັ້ນ ບັດນີ້ດາບນັ້ນຈະບໍ່ຄາດ
ໄປຈາກຣາຊວົງຂອງເຈົ້າ, ເພາະເຈົ້າໄດ້ດູຫມິ່ນເຮົາ ແລະໄດ້ເອົາເມຍຂອງອູຣີຢາຄົນຮິດຕີມາເປັນເມຍຂອງເຈົ້າ."
11ພຣະຢາເວກ່າວວ່າ, 'ນີ້ແຫລະ, ເຮົາຈະໃຫ້ເຫດຮ້າຍເກີດຂຶ້ນກັບເຈົ້າຈາກຄອບຄົວຂອງເຈົ້າເອງ. ຕໍ່ຫນ້າຕໍ່ຕາເຈົ້າ, ເຮົາຈະເອົາບັນດາເມຍ
ຂອງເຈົ້າໄປໃຫ້ເພື່ອນຂອງເຈົ້າ, ແລະເຂົາຈະນອນຮ່ວມກັບບັນດາເມຍຂອງເຈົ້າຢ່າງເປີດເຜີຍ.12ເພາະເຈົ້າໄດ້ເຮັດບາບຂອງເຈົ້ານັ້ນຢ່າງລັບໆ,
ແຕ່ເຮົາຈະເຮັດການນີ້,ຕໍ່ຫນ້າອິດສະຣາເອນທັງຫມົດຢ່າງເປີດເຜີຍ. ""13ແລ້ວດາວິດຈຶ່ງໄດ້ກ່າວກັບນາທານວ່າ, "ເຮົາໄດ້ກະທໍາບາບຕໍ່ພຣະຢາ
ເວແລ້ວ." ນາທານໄດ້ທູນດາວິດວ່າ, "ພຣະຢາເວໄດ້ຊົງໃຫ້ອະໄພບາບຂອງທ່ານແລ້ວເຊັ່ນກັນ. ທ່ານເອງຈະບໍ່ຖືກຂ້າ.
14ຢ່າງໃດກໍຕາມ, ເພາະທ່ານໄດ້ຊົງຫມິ່ນປະຫມາດພຣະຢາເວແລ້ວ, ດ້ວຍການກະທໍາຄັ້ງນີ້ ລູກຊາຍທີ່ເກີດມານັ້ນຈະຕາຍແນ່ນອນ."15ແລ້ວນາ
ທານກໍໄດ້ກັບໄປຍັງບ້ານຂອງເຂົາ. ແລະພຣະຢາເວໄດຊົງເຮັດໃຫ້ລູກຊາຍ ຊຶ່ງເມຍຂອງອູຣີຢາເກີດກັບດາວິດນັ້ນ, ໄດ້ປ່ວຍຫນັກ.
16ດາວິດກໍໄດ້ຊົງອ້ອນວອນຕໍ່ພຣະເຈົ້າເພື່ອລູກຊາຍນັ້ນ. ດາວິດໄດ້ຊົງອົດອາຫານ ແລະໄດ້ເຂົ້າໄປຂ້າງໃນ ແລະໄດ້ນອນເທິງພື້ນຕະຫລອດຄືນ.
17ພວກຜູ້ອາວຸໂສໃນວັງຂອງເພິ່ນກໍໄດ້ລຸກຂຶ້ນ ແລະໄດ້ມາຢືນຢູ່ຂ້າງເພິ່ນ, ເພື່ອຈະຍົກເພິ່ນຂຶ້ນຈາກພື້ນ, ແຕ່ເພິ່ນບໍ່ຊົງຍອມລຸກຂຶ້ນ, ແລະເພິ່ນບໍ່
ກິນຫຍັງກັບພວກເຂົາ.18ແລ້ວເຫດການນີ້ກໍໄດ້ເກີດຂຶ້ນ ພໍມື້ທີເຈັດລູກຊາຍກໍໄດ້ເສຍຊີວິດ. ສ່ວນຂ້າຣາຊການຂອງດາວິດກໍໄດ້ຢ້ານ ບໍ່ກ້າທູນ
ເພິ່ນວ່າ, ລູກຊາຍນັ້ນຕາຍແລ້ວ ເພາະພວກເຂົາໄດ້ເວົ້າກັນວ່າ, "ເບິ່ງເຖີດ ຂະນະທີ່ລູກຊາຍຍັງຕາຍຢູ່ ພວກເຮົາໄດ້ທູນຕໍ່ເພິ່ນ, ແຕ່ເພິ່ນກໍບໍ່ໄດ້ຊົງ
ຟັງສຽງຂອງພວກເຮົາເລີຍ. ເພິ່ນກໍອາດເຮັດຫຍັງຕໍ່ຕົວເພິ່ນເອງຫລືບໍ່? ຖ້າພວກເຮົາທູນເພິ່ນວ່າ ລູກຊາຍໄດ້ເສຍຊີວິດແລ້ວ?!"
19ແຕ່ເມື່ອດາວິດໄດ້ແນມເບິ່ງເຫລົ່າຂ້າຣາຊການກໍາລັງຊຶມກັນຢູ່, ດາວິດກໍໄດ້ເຂົ້າໃຈວ່າລູກຊາຍນັ້ນໄດ້ເສຍຊີວິດແລ້ວ. ເພິ່ນຈຶ່ງໄດ້ຊົງຮັບສັ່ງກັບ
ຂ້າຣາຊການຂອງເພິ່ນວ່າ, "ເດັກນັ້ນໄດ້ເສຍຊີວິດແລ້ວບໍ?" ພວກເຂົາໄດ້ທູນຕອບວ່າ,"ໄດ້ເສຍຊີວິດແລ້ວ"20ແລ້ວດາວິດກໍໄດ້ຊົງລຸກຂຶ້ນຈາກພື້ນ
ແລະໄດ້ຊໍາລະລ້າງຮ່າງກາຍຂອງເພິ່ນ, ເຊັດໂຕເພິ່ນ, ປ່ຽນເຄື່ອງເພິ່ນ. ເພິ່ນໄດ້ດໍາເນີນເຂົ້າໄປໃນພຣະວິຫານຂອງພຣະຢາເວ ແລະໄດ້ນະມັດ
ສະການທີ່ນັ້ນ, ແລະຫລັງຈາກນັ້ນແລ້ວເພິ່ນກໍໄດ້ກັບຣາຊວັງຂອງເພິ່ນ. ເມື່ອເພິ່ນໄດ້ຊົງຮັບສັ່ງ, ໃຫ້ຈັດອາຫານມາພວກເຂົາກໍໄດ້ຈັດຂອງກິນຕໍ່
ຫນ້າເພິ່ນ, ແລະເພິ່ນກໍໄດ້ກິນ.
21ແລ້ວເຫລົ່າຂ້າຣາຊການຂອງເພິ່ນຈຶ່ງໄດ້ທູນຖາມເພິ່ນວ່າ, "ເປັນຫຍັງທ່ານເຮັດເຊັ່ນນີ້? ທ່ານໄດ້ອົດອາຫານ ແລະຊົງຮ້ອງໄຫ້ເພື່ອລູກຊາຍນັ້ນ
ໃນຂະນະທີ່ເຂົາຊົງມີຊີວິດຢູ່, ແຕ່ເມື່ອລູກຊາຍນັ້ນເສຍຊີວິດແລ້ວ, ທ່ານກໍໄດ້ຊົງລຸກຂຶ້ນກິນອາຫານ."22ດາວິດກໍໄດ້ຕອບວ່າ,"ເມື່ອເດັກນັ້ນມີຊີ
ວິດຢູ່ ເຮົາໄດ້ອົດອາຫານ ແລະໄດ້ຮ້ອງໄຫ້. ເພາະເຮົາວ່າ, ໃຜຈະຮູ້ໄດ້ວ່າພຣະຢາເວຈະຊົງເມດຕາເຮົາຫລືບໍ່, ທີ່ຈະຊົງໃຫ້ເດັກນັ້ນມີຊີວິດຕໍ່
ໄດ້?23ແຕ່ດຽວນີ້ເຂົາໄດ້ເສຍຊີວິດແລ້ວ, ເຮົາຈະອົດອາຫານເຮັດຫຍັງ? ເຮົາຈະເຮັດເດັກໃຫ້ຟື້ນຂຶ້ນມາໄດ້ບໍ? ເຮົາຈະຕາມເດັກນັ້ນໄປ, ແຕ່ເຂົາ
ຈະບໍ່ກັບມາຫາເຮົາ."
24ຕໍ່ມາ ດາວິດຊົງໄປຫານາງບັດເຊບາເມຍຂອງຕົນ, ແລະໄດ້ຊົງຫລັບນອນກັບນາງ, ນາງກໍໄດ້ເກີດລູກຊາຍຄົນຫນຶ່ງຊື່ວ່າ ໂຊໂລໂມນ ພຣະຢາເວ
ໄດ້ຊົງຮັກເຂົາ.25ແລະພຣະອົງໄດ້ຊົງໃຊ້ນາທານຜູ້ທໍານວຍໄປ ຕັ້ງຊື່ລູກຊາຍນັ້ນວ່າ ເຢດີດີຢາ, ເພາະພຣະຢາເວຊົງຮັກເພິ່ນ.
26ບັດນີ້ໂຢອາບໄດ້ສູ້ຮົບກັບຣັບບາ, ເມືອງຫລວງຂອງຄົນອໍາໂມນ ແລະເຂົາໄດ້ຍຶດປ້ອມປາການຂອງເມືອງນັ້ນໄດ້.27ດັ່ງນັ້ນໂຢອາບຈຶ່ງໄດ້ສົ່ງຜູ້ສື່
ສານໄປເຝົ້າດາວິດ ແລະໄດ້ທູນວ່າ, "ຂ້ານ້ອຍໄດ້ສູ້ຮົບກັບນະຄອນຣັບບາ, ແລະຂ້ານ້ອຍໄດ້ຍຶດແຫລ່ງນ້ໍາຂອງເມືອງໄດ້ແລ້ວ.28ບັດນີ້ຂໍທ່ານໄດ້
ຊົງຮວບຮວມທະຫານທີ່ເຫລືອ ແລະຕັ້ງຄ້າຍຕີເມືອງນັ້ນ ແລະຍຶດໃຫ້ໄດ້, ເພາະຢ້ານວ່າຖ້າຂ້ານ້ອຍຕີໄດ້, ກໍຈະຮ້ອງຊື່ເມືອງນັ້ນຕາມຊື່ຂອງຂ້າ
ນ້ອຍ."
29ດັ່ງນັ້ນດາວິດຈຶ່ງໄດ້ຊົງຮວບຮວມທະຫານທັງຫມົດ ແລະໄດ້ຍົກໄປຍັງເມືອງຣັບບາ, ເພິ່ນໄດ້ຊົງຕໍ່ສູ້ ແລະໄດ້ຍຶດເມືອງນັ້ນໄດ້.30ດາວິດຊົງຍຶດມົງ
ກຸດຈາກຫົວຂອງກະສັດຂອງພວກເຂົາ. ມົງກຸດນັ້ນເປັນທອງຄໍາຫນັກປະມານສາມສິບຫ້າກິໂລ. ປະດັບດ້ວຍເພັດພອຍ ເຂົາກໍໄດ້ໃສ່ເທິງຫົວຂອງ
ດາວິດ. ແລ້ວເພິ່ນໄດ້ຊົງຍຶດຊັບສົມບັດຂອງເມືອງນັ້ນອອກໄປຢ່າງຫລວງຫລາຍ.
31ເພິ່ນໄດ້ຊົງນໍາປະຊາຊົນ ທີ່ຢູ່ໃນເມືອງນັ້ນອອກມາ ແລະໄດ້ຊົງບັງຄັບໃຫ້ເຮັດວຽກງານດ້ວຍເລື່ອຍຕ່າງໆ, ແລະຂວານເຫລັກຕ່າງໆ ເພິ່ນໄດ້ຊົງ
ໃຫ້ພວກເຂົາເຮັດງານທີ່ເຕົາເຜົາດິນຈີ່. ດາວິດໄດ້ຊົງໃຫ້ເມືອງທັງຫມົດ ຂອງຄົນອໍາໂມນໄດ້ເຮັດງານໃຊ້ແຮງງານນີ້. ແລ້ວດາວິດກໍໄດ້ກັບໄປ
ນະຄອນເຢຣູຊາເລັມພ້ອມກັບທະຫານທັງຫມົດ.

 generated on Tue Jun 17 19:01:42 2025

13 [1]ເຫດການເຫລົ່ານີ້ໄດ້ເກີດຂຶ້ນຫລັງຈາກທີ່ ອຳໂນນລູກຊາຍຂອງດາວິດ, ໄດ້ຊົງຫລົງຮັກຕາມາລູກຊາຍຕ່າງແມ່ຂອງເພິ່ນທີ່ງົດງາມ, ຕາມາ
ຜູ້ຊຶ່ງເປັນນ້ອງສາວແທ້ໆ ຂອງອັບຊາໂລມ, ລູກຊາຍອີກຄົນຫນຶ່ງຂອງດາວິດ.[2]ອຳໂນນໄດ້ຊົງຄັບອົກຄັບໃຈຈົນລົ້ມປ່ວຍເນື່ອງດ້ວຍລູກສາວ
ຕາມາ. ນາງເປັນສາວພົມມະຈາລີ, ແລະເບິ່ງຄືວ່າຈະເປັນໄປບໍ່ໄດ້ສຳຫລັບອຳໂນນທີ່ຈະເຮັດຫຍັງກັບນາງໄດ້.

[3]ແຕ່ອຳໂນນໄດ້ມີຫມູ່ຄົນຫນຶ່ງຊື່ໂຢນາດາບລູກຊາຍຂອງຊາມມາເປັນອ້າຍຂອງດາວິດ, ໂຢນາດາບນັ້ນເປັນຄົນເຈົ້າປັນຍາ.[4]ໂຢນາດາບຈຶ່ງໄດ້ທູນ
ອຳໂນນວ່າ, "ເປັນຫຍັງ,ລູກຊາຍຂອງກະສັດ, ຈຶ່ງໄດ້ຊົງຊຶມເສົ້າເຊັ່ນນີ້ທຸກເຊົ້າ? ທ່ານຈະບໍ່ຊົງບອກໃຫ້ຂ້ານ້ອຍຮູ້ແດ່ບໍ?" ດັ່ງນັ້ນອຳໂນນຈຶ່ງໄດ້
ຕອບເຂົາວ່າ, "ເຮົາຮັກຕາມານ້ອງສາວຂອງອັບຊາໂລມ,ນ້ອງຊາຍຂອງເຮົາ."
[5]ແລ້ວ ໂຢນາດາບຈຶ່ງໄດ້ບອກເພິ່ນວ່າ, "ຂໍເຊີນນອນເທິງບ່ອນນອນ ແລະທຳທ່າເປັນໄຂ້. ເມື່ອພໍ່ຂອງທ່ານມາຢ້ຽມ, ກໍໃຫ້ທູນວ່າ, "ຂໍກະລຸນາໃຫ້
ຕາມານ້ອງສາວຂອງຂ້ານ້ອຍມາໃຫ້ອາຫານແກ່ຂ້ານ້ອຍ ແລະມາຕຽມອາຫານຕໍ່ຫນ້າຂ້ານ້ອຍ ເພື່ອຂ້ານ້ອຍຈະໄດ້ເຫັນ, ແລະກິນຈາກມືຂອງ
ນາງ?""[6]ດັ່ງນັ້ນ ອຳໂນນຈຶ່ງນອນ ແລະໄດ້ທຳທ່າເປັນໄຂ້ ເມື່ອກະສັດໄດ້ມາຢ້ຽມ. ອຳໂນນກໍໄດ້ທູນກະສັດວ່າ,"ຂໍກາລຸນາໃຫ້ຕາມານ້ອງສາວມາ
ເຮັດອາຫານຕໍ່ຫນ້າຂ້ານ້ອຍ ເພື່ອທີ່ຂ້ານ້ອຍຈະໄດ້ກິນຈາກມືຂອງນາງ."
[7]ແລ້ວດາວິດກໍຊົງໃຊ້ຄົນໄປແຈ້ງຕາມາທີ່ວັງຂອງເພິ່ນວ່າ, "ຈົ່ງໄປທີ່ວັງຂອງອຳໂນນອ້າຍຂອງເຈົ້າ ແລະເຮັດອາຫານໃຫ້ເຂົາ."[8]ດັ່ງນັ້ນຕາມາກໍໄດ້
ໄປຍັງວັງຂອງອຳໂນນອ້າຍຂອງນາງ ທີ່ເຂົາກຳລັງນອນຢູ່. ນາງໄດ້ຈັບແປ້ງມາ ແລະໄດ້ນວດ, ແລະໄດ້ເຮັດຂະຫນົມຕໍ່ຫນ້າເພິ່ນ.[9]ນາງກໍໄດ້ປີ້ງຂະ
ຫນົມ ນາງກໍໄດ້ຍົກຫມໍ້ມາ ແລະໃຫ້ຂະຫນົມຕໍ່ອ້າຍ, ແຕ່ອຳໂນນກໍໄດ້ຊົງປະຕິເສດທີ່ຈະບໍ່ກິນ. ແລ້ວອຳໂນນໄດ້ເວົ້າກັບຄົນອື່ນໆ ທີ່ຢູ່ໃນນັ້ນວ່າ,
"ໃຫ້ທຸກຄົນອອກໄປ, ອອກໄປຈາກເຮົາ" ດັ່ງນັ້ນທຸກຄົນກໍໄດ້ອອກໄປຈາກເພິ່ນ.
[10]ດັ່ງນັ້ນອຳໂນນກໍໄດ້ສັ່ງກັບຕາມາວ່າ, "ຈົ່ງເອົາອາຫານເຂົ້າມາໃນຫ້ອງຂອງອ້າຍ ເພື່ອອ້າຍຈະໄດ້ກິນຈາກມືຂອງນ້ອງ." ດັ່ງນັ້ນຕາມາກໍໄດ້ນຳ
ຂະຫນົມທີ່ນາງໄດ້ເຮັດນັ້ນ, ແລະໄດ້ນຳເຂົ້າໄປໃນຫ້ອງໃຫ້ອຳໂນນອ້າຍຂອງນາງ.[11]ເມື່ອນາງໄດ້ນຳຂະຫນົມມາໃກ້ເພິ່ນ, ອຳໂນນກໍໄດ້ຊົງຈັບ
ນາງໄວ້ ແລະໄດ້ເວົ້າວ່າ,"ມາເຖີດ, ເຂົ້າມານອນກັບອ້າຍ."[12]ນາງຈຶ່ງໄດ້ຕອບເພິ່ນວ່າ, "ຢ່າເລີຍ, ອ້າຍຂອງຂ້ານ້ອຍ, ຢ່າໄດ້ບັງຄັບຂ້ານ້ອຍເລີຍ,
ສິ່ງຢ່າງນີ້ເຂົາບໍ່ເຮັດກັນໃນອິດສະຣາເອນ. ຢ່າເຮັດເລື່ອງທີ່ຊົ່ວຊ້າຢ່າງນີ້ເລີຍ!
[13]ຂ້ານ້ອຍຈະກຳຈັດຄວາມອາຍນີ້ໄປໄດ້ຢ່າງໃດ? ສ່ວນອ້າຍເດ່? ອ້າຍກໍຈະເປັນຄົນເສຍຫນ້າຄົນຫນຶ່ງໃນອິດສະຣາເອນ! ບັດນີ້, ຂໍທູນກະສັດ
ເຖີດ, ເພິ່ນຈະບໍ່ຫວງຂ້ານ້ອຍໄວ້ຈາກເພິ່ນ."[14]ຢ່າງໃດກໍຕາມອຳໂນນບໍ່ຍອມຟັງສຽງນາງ. ເພາະເພິ່ນຊົງມີກຳລັງຫລາຍກວ່າຕາມາ, ເພິ່ນຈຶ່ງໄດ້
ຊົງບັງຄັບນາງ ແລະນອນກັບນາງ.
[15]ແລ້ວອຳໂນນກໍໄດ້ຊົງເບື່ອຫນ່າຍນາງ ດ້ວຍຄວາມກຽດຊັງທີ່ສຸດ. ເພິ່ນຊົງກຽດຊັງນາງຫລາຍ ຍິ່ງກວ່າຄວາມປາຖະຫນາຊຶ່ງເພິ່ນຊົງເຄີຍມີຕໍ່
ນາງ. ອຳໂນນໄດ້ເວົ້າກັບນາງວ່າ, "ຈົ່ງລຸກຂຶ້ນໄປໃຫ້ພົ້ນ."[16]ແຕ່ນາງໄດ້ຕອບເພິ່ນວ່າ, "ບໍ່! ເພາະຄວາມຜິດໃຫຍ່ຫລວງນີ້ ທີ່ຈະຊົງຂັບໄລ່ຂ້ານ້ອຍ
ໄປກໍຫລາຍກວ່າ ສິ່ງທີ່ທ່ານໄດ້ຊົງເຮັດກັບຂ້ານ້ອຍ!" ແຕ່ອຳໂນນບໍ່ຍອມຟັງນາງ.[17]ແຕ່ໄດ້ຊົງຮ້ອງມະຫາດເລັກສ່ວນພະອົງ ແລະໄດ້ເວົ້າວ່າ, "ຈົ່ງ
ເອົາຜູ້ຍິງຄົນນີ້ອອກໄປໃຫ້ພົ້ນເຮົາ, ແລ້ວປິດປະຕູໃສ່ໄລຫລັງຈາກນາງອອກໄປ."
[18]ແລະມະຫາດເລັກຂອງພະອົງ ກໍໄດ້ນຳນາງອອກໄປ ແລະໄດ້ປິດປະຕູໃສ່ໄລຫລັງຈາກນາງອອກໄປ. ຕາມາໄດ້ນຸ່ງເສື້ອຄຸມຍາວທີ່ໄດ້ປະດັບປະ
ດາ ເພາະເຫລົ່າລູກສາວຂອງກະສັດທີ່ຍັງເປັນຍິງພົມມະຈາລີນຸ່ງກັນເຊັ່ນນັ້ນ.[19]ຕາມາກໍໄດ້ເອົາຂີ້ເທົ່າໃສ່ທີ່ຫົວຂອງນາງ ແລະໄດ້ຈີກເສື້ອຄຸມຍາວ
ຂອງນາງ. ນາງໄດ້ເອົາມືທັງສອງຂ້າງຂອງນາງຄຸມຫົວ ແລະໄດ້ຍ່າງໄປ, ຮ້ອງໄຫ້ສຽງດັງຂະນະທີ່ນາງໄດ້ຍ່າງໄປ.
[20]ອັບຊາໂລມອ້າຍຂອງນາງກໍໄດ້ເວົ້າກັບນາງວ່າ, "ອຳໂນນອ້າຍຂອງນ້ອງໄດ້ຢູ່ກັບນ້ອງບໍ່? ແຕ່ ບັດນີ້ ຈົ່ງມິດສາ, ນ້ອງຂອງອ້າຍ. ເຂົາເປັນອ້າຍ
ຂອງເຈົ້າ. ຢ່າທຸກໃຈເພາະເລື່ອງນີ້ເລີຍ," ດັ່ງນັ້ນຕາມາກໍໄດ້ຢູ່ດຽວດາຍໃນວັງຂອງອ້າຍອັບຊາໂລມ.[21]ແຕ່ເມື່ອກະສັດດາວິດໄດ້ຊົງຮູ້ເລື່ອງເຫລົ່າ
ນີ້ທັງຫມົດ, ເພິ່ນກໍໄດ້ໃຈຮ້າຍຫລາຍ.[22]ອັບຊາໂລມບໍ່ໄດ້ເວົ້າກັບອຳໂນນເລີຍ, ເພາະອັບຊາໂລມໄດ້ກຽດຊັງເພິ່ນຫລາຍໃນສິ່ງທີ່ເພິ່ນໄດ້ເຮັດກັບ
ຕາມານ້ອງສາວຂອງເພິ່ນໄດ້ອັບອາຍ.
[23]ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນ ຕໍ່ມາອີກສອງປີເຕັມ ທີ່ອັບຊາໂລມໄດ້ຈັດງານຕັດຂົນແກະທີ່ບາອານຮາໂຊ, ຊຶ່ງຢູ່ໃກ້ເອຟຣາອິມ, ແລະອັບຊາໂລມໄດ້
ເຊີນລູກທັງຫມົດຂອງກະສັດໄປໃນງານນັ້ນ.[24]ອັບຊາໂລມໄດ້ໄປເຝົ້າກະສັດ ແລະໄດ້ທູນວ່າ,"ເບິ່ງເຖີດ, ຜູ້ຮັບໃຊ້ຂອງທ່ານມີງານຕັດຂົນແກະ. ຂໍ
ທູນເຊີນ,ກະສັດພ້ອມດ້ວຍມະຫາດເລັກຂອງທ່ານໄປໃນງານນັ້ນໄປກັບຂ້ານ້ອຍ,ຜູ້ຮັບໃຊ້ຂອງທ່ານ."
[25]ກະສັດໄດ້ເວົ້າກັບອັບຊາໂລມວ່າ, "ບໍ່, ລູກເອີຍ, ຢ່າເລີຍ ພວກເຮົາທຸກຄົນບໍ່ຄວນໄປກັນຫມົດເລີຍ ເພາະວ່າພວກເຮົາຈະເປັນພາລະແກ່ເຈົ້າ."
ອັບຊາໂລມກໍໄດ້ຊົງເກັ້ຍກ່ອມກະສັດ, ແຕ່ເພິ່ນກໍບໍ່ຍອມໄປ, ແຕ່ເພິ່ນໄດ້ຊົງອວຍພອນໃຫ້ອັບຊາໂລມ.[26]ແລ້ວອັບຊາໂລມຈຶ່ງໄດ້ທູນວ່າ, "ຖ້າບໍ່ກະລຸ
ນາໄປ ກໍຂໍຊົງກະລຸນາໃຫ້ອຳໂນນອ້າຍຂອງຂ້ານ້ອຍໄປດ້ວຍກັນກັບພວກເຮົາເຖີດ." ດັ່ງນັ້ນກະສັດໄດ້ເວົ້າວ່າ,"ເປັນຫຍັງຈະໃຫ້ອຳໂນນໄປກັບ
ເຈົ້າດ້ວຍ?"
[27]ອັບຊາໂລມໄດ້ທູນເກັ້ຍກ່ອມດາວິດ, ແລະດັ່ງນັ້ນເພິ່ນຈຶ່ງໄດ້ຊົງໃຫ້ອຳໂນນ ແລະລູກຂອງກະສັດທັງຫມົດໄປດ້ວຍກັນກັບອັບຊາໂລມ.[28]ອັບຊາ
ໂລມໄດ້ຊົງບັນຊາພວກມະຫາດເລັກຂອງເພິ່ນວ່າ,"ຈົ່ງຖ້າເບິ່ງຢ່າງໃກ້ຊິດ. ເມື່ອອຳໂນນໄດ້ເລີ່ມເມົາເຫລົ້າອະງຸ່ນເມື່ອໃດ, ແລະເມື່ອເຮົາສັ່ງພວກ
ເຈົ້າວ່າ, "ຈົ່ງປະຫານອຳໂນນ," ແລ້ວຈົ່ງຂ້າເຂົາ ຢ່າຢ້ານເລີຍ. ເຮົາເອງສັ່ງພວກເຈົ້າແລ້ວບໍ່ແມ່ນບໍ່? ຈົ່ງເຂັ້ມແຂງ ແລະກ້າຫານເຖີດ."[29]ດັ່ງນັ້ນ
ພວກມະຫາດເລັກຂອງອັບຊາໂລມກໍໄດ້ເຮັດກັບອຳໂນນຕາມທີ່ອັບຊາໂລມໄດ້ຊົງບັນຊາໄວ້. ແລ້ວລູກທັງຫມົດຂອງກະສັດກໍໄດ້ລຸກຂຶ້ນ, ແລະທຸກ
ຄົນກໍໄດ້ຊົງຂີ່ລໍແຕ່ລະຄົນ ແລະຫນີໄປ ດັ່ງນັ້ນ.
[30]ສິ່ງນີ້ໄດ້ເກີດຂຶ້ນ, ຂະນະເມື່ອເຫລົ່າ,ລູກຊາຍໄດ້ຊົງດຳເນີນຢູ່ຕາມທາງໄດ້ມີຂ່າວໄປເຖິງດາວິດວ່າ, "ອັບຊາໂລມໄດ້ຊົງຂ້າລູກຂອງເພິ່ນທັງຫມົດ
ແລ້ວ, ແລະບໍ່ເຫລືອລອດຢູ່ຈັກຄົນດຽວ."[31]ກະສັດຈຶ່ງລຸກຂຶ້ນຈີກເຄື່ອງນຸ່ງຫົ່ມຂອງຕົນດ້ວຍຄວາມໂສກເສົ້າ, ແລະນອນລົງພື້ນ, ຄົນຮັບໃຊ້ທັງ
ຫມົດກໍໄດ້ນຸ່ງເສື້ອຜ້າຈີກຂາດຢືນເຝົ້າຢູ່.
[32]ໂຢນາດາບລູກຊາຍຂອງຊາມມາ, ຫລານຊາຍຂອງດາວິດ, ໄດ້ຊົງຕອບ ແລະໄດ້ທູນວ່າ, "ຂໍຢ່າໃຫ້ເຈົ້ານາຍຂອງຂ້ານ້ອຍສຳຄັນຜິດໄປວ່າ
ພວກເຂົາໄດ້ຂ້າຄົນຫນຸ່ມແຫນ້ນທັງຫມົດທີ່ເປັນລູກຂອງກະສັດ, ເພາະວ່າອຳໂນນຕາຍແຕ່ຜູ້ດຽວ. ອັບຊາໂລມຊົງວາງແຜນການນີ້ຕັ້ງແຕ່ມື້ທີ່ອຳ
ໂນນໄດ້ຊົງເຮັດຮຸນແຮງຕໍ່ຕາມານ້ອງສາວຂອງທ່ານ.[33]ເພາະສະນັ້ນ ຂໍກະສັດເຈົ້ານາຍຂອງຂ້ານ້ອຍຢ່າທຸກໃຈ, ດ້ວຍຊົງຢ່າເຊື່ອວ່າ ລູກທັງຫມົດ
ຂອງທ່ານໄດ້ຕາຍ,ເພາະອຳໂນນໄດ້ຕາຍແຕ່ຄົນດຽວ."

 generated on Tue Jun 17 19:01:42 2025

[34]ອັບຊາໂລມກໍໄດ້ໜີໄປ. ທະຫານຍາມໄດ້ແງນໜ້າຂຶ້ນເບິ່ງ ແລະໄດ້ເຫັນຄົນຈຳນວນຫລາຍກຳລັງມາ ຈາກທາງຕາມຫລັງເນີນພູທາງດ້ານຕາເ
ວັນຕົກຂອງເຂົາ.[35]ແລ້ວໂຢນາດາບຈຶ່ງໄດ້ທູນກະສັດວ່າ, "ເບິ່ງເຖີດ, ບັນດາລູກຊາຍກຳລັງມາແລ້ວ. ສິ່ງນີ້ເປັນຈິງຕາມຖ້ອຍຄຳທີ່ຜູ້ຮັບໃຊ້ ຂອງ
ທ່ານໄດ້ທູນແລ້ວ."[36]ດັ່ງນັ້ນ ສິ່ງນີ້ໄດ້ເກີດຂຶ້ນ ເມື່ອເຂົາໄດ້ເວົ້າຈົບລົງບັນດາລູກຂອງກະສັດ,ກໍໄດ້ມາເຖິງ ແລະຊົ່ງຮ້ອງໃຫ້ສຽງດັງແລະຊົ່ງຂົມຂື່ນ.
ກະສັດກໍຊົ່ງຂົມຂື່ນ ແລະບັນດາຄົນຮັບໃຊ້ກໍຮ້ອງໄຫ້ສະອຶກສະອື້ນດ້ວຍເຊັ່ນກັນ.
[37]ແຕ່ອັບຊາໂລມໄດ້ໜີໄປ ແລະໄດ້ເຂົ້າເຝົ້າຕານໄມ ລູກຊາຍຂອງອາມມີຮຸດ, ກະສັດເມືອງເກຊູ. ດາວິດໄດ້ຊົ່ງໄວ້ທຸກໃຫ້ລູກຂອງເພິ່ນທຸກມື້.
[38]ດັ່ງນັ້ນ ອັບຊາໂລມກໍໄດ້ໜີໄປຍັງເມືອງເກຊູ, ແລະໄດ້ຊົ່ງຢູ່ທີ່ນັ້ນສາມປີ.[39]ໃຈຂອງກະສັດດາວິດຊົ່ງອາໄລເຖິງອັບຊາໂລມ, ເພາະເພິ່ນໄດ້ຊົ່ງຮັບ
ການເລົ້າໂລມເລື່ອງຂອງອຳໂນນ ແລະການຕາຍຂອງເຂົາ.

 generated on Tue Jun 17 19:01:42 2025

14 1ບັດນີ້ໂຢອາບລູກຊາຍຂອງນາງເຊຣູອີຢາ ໄດ້ຮູ້ວ່າຈິດໃຈຂອງກະສັດໄດ້ຊົງປາຖະຫນາຈະໄດ້ພົບອັບຊາໂລມ. 2ດັ່ງນັ້ນໂຢອາບຈຶ່ງໄດ້ໃຊ້ຄົນ
ໄປຍັງເມືອງເຕໂກວ ແລະໄດ້ພາຜູ້ຍິງສະຫລາດຄົນຫນຶ່ງມາພົບເຂົາ. ເຂົາໄດ້ບອກນາງວ່າ,"ຈົ່ງທຳທ່າເປັນຄົນໄວ້ທຸກ ແລະນຸ່ງເສື້ອຂອງຄົນໄວ
◌ທຸກ. ກະລຸນາຢ່າທານ້ຳມັນ, ແຕ່ທຳທ່າຄືຜູ້ຍິງໄວ້ທຸກໃຫ້ຜູ້ຕາຍມາຫລາຍມື້. 3ແລ້ວຈົ່ງເຂົ້າໄປເຝົ້າກະສັດ ແລະທູນຂໍ້ຄວາມແກ່ທ່ານກ່ຽວກັບສິ່ງ
ທີ່ເຮົາຈະອະທິບາຍໃຫ້ເຈົ້າ."ດັ່ງນັ້ນໂຢອາບກໍໄດ້ບອກຖ້ອຍຄຳໃຫ້ຍິງນັ້ນທີ່ຈະໄປທູນແກ່ກະສັດ.

4ເມື່ອຜູ້ຍິງຊາວເຕໂກວໄດ້ມາທູນຕໍ່ກະສັດ, ນາງກໍໄດ້ນອນຊົບຫນ້າລົງເຖິງພື້ນດິນ ແລະໄດ້ທູນວ່າ,"ຂ້າແດ່ກະສັດ, ຂໍຊົງຊ່ວຍຂ້ານ້ອຍດ້ວຍ
ເຖີດ." 5ກະສັດໄດ້ເວົ້າກັບຜູ້ຍິງນັ້ນວ່າ, "ເຈົ້າມີເລື່ອງຫຍັງບໍ?" ນາງໄດ້ທູນວ່າ,"ຄວາມຈິງເປັນດັ່ງນີ້ ຂ້ານ້ອຍເປັນຍິງຫມ້າຍ, ຜົວຂອງຂ້ານ້ອຍໄດ້
ຕາຍແລ້ວ. 6ຂ້ານ້ອຍ,ສາວໃຊ້ຂອງທ່ານມີລູກຊາຍສອງຄົນ, ແລະພວກເຂົາກໍໄດ້ແຕ່ງງານກັນທີ່ທົ່ງນາ, ແລະບໍ່ມີໃຜແຍກພວກເຂົາອອກ. ລູກຊາຍ
ຄົນຫນຶ່ງຈຶ່ງໄດ້ຂ້າອີກຄົນຫນຶ່ງຕາຍ.
7ບັດນີ້ ບັນດາຍາດພີ່ນ້ອງທັງຫມົດ,ກໍໄດ້ຫັນກັນມາຫາສາວໃຊ້ຂອງເພິ່ນບອກວ່າ,"ຈົ່ງມອບຜູ້ຂ້າອ້າຍຂອງເຂົາເພື່ອເຮົາຈະຂ້າເຂົາໃຫ້ຕາຍ, ເພື່ອ
ຊົດໃຊ້ຊີວິດຂອງອ້າຍເຂົາທີ່ຖືກຂ້ານັ້ນ.' ດັ່ງນັ້ນພວກເຂົາຈະທຳລາຍຜູ້ຮັບມໍລະດົກດ້ວຍ." ດັ່ງນີ້ຂ້ານ້ອຍກໍຈະບໍ່ມີລູກເຫລືອຢູ່ເລີຍ, ແລະພວກ
ເຂົາຈະບໍ່ເຫລືອໃຫ້ ແມ່ນແຕ່ຊື່ຫລືເຊື້ອສາຍ ຂອງຜົວຂ້ານ້ອຍເທິງພື້ນແຜ່ນດິນໂລກນີ້ເລີຍ."
8ດັ່ງນັ້ນກະສັດຈຶ່ງໄດ້ເວົ້າກັບຍິງຄົນນັ້ນວ່າ, "ໄປບ້ານເຈົ້າເຖີດ, ແລະເຮົາເອງຈະສັ່ງການບາງສິ່ງເພື່ອເຈົ້າ." 9ຜູ້ຍິງຊາວເຕໂກວ ຈຶ່ງໄດ້ທູນກະສັດ
ວ່າ,"ຂ້າແດ່ກະສັດ,ເຈົ້ານາຍຂອງຂ້ານ້ອຍ, ຂໍໃຫ້ໂທດຕົກຢູ່ກັບຂ້ານ້ອຍ ແລະກັບເຊື້ອສາຍພໍ່ຂອງຂ້ານ້ອຍເຖີດ. ກະສັດ ແລະຄົນຮັບໃຊ້ຂອງ
ເພິ່ນຢ່າໃຫ້ມີໂທດເລີຍ."
10ກະສັດໄດ້ຕອບວ່າ, "ຖ້າມີໃຜກ່າວຫຍັງແກ່ເຈົ້າ, ຈົ່ງພາເຂົາມາຫາເຮົາ, ແລະເຂົາຈະບໍ່ແຕະຕ້ອງເຈົ້າອີກເລີຍ." 11ແລ້ວນາງກໍໄດ້ທູນວ່າ, "ຂໍກະ
ສັດຊົງກ່າວ,ໃນພຣະນາມພຣະຢາເວພຣະເຈົ້າຂອງທ່ານ, ເພື່ອຜູ້ຮັບຜິດຊອບແຫ່ງໂລຫິດຈະບໍ່ທຳລາຍຜູ້ໃດອີກຕໍ່ໄປ, ດັ່ງນັ້ນພວກເຂົາຈະບໍ່ທຳ
ຮ້າຍລູກຊາຍຂອງຂ້ານ້ອຍ." ກະສັດໄດ້ກ່າວວ່າ, "ພຣະຢາເວຊົງມີຊີວິດຢູ່, ເສັ້ນຜົມຂອງລູກຊາຍຂອງເຈົ້າເສັ້ນດຽວຈະບໍ່ຕົກລົງເຖິງດິນ."
12ແລ້ວຜູ້ຍິງໄດ້ທູນວ່າ, "ຂໍສາວໃຊ້ຂອງທ່ານໄດ້ທູນອີກຈັກຄຳຫນຶ່ງແກ່ກະສັດເຈົ້ານາຍຂອງຂ້ານ້ອຍ." ເພິ່ນໄດ້ກ່າວວ່າ, "ຈົ່ງເວົ້າມາ." 13ດັ່ງນັ້ນຜູ້
ຍິງນັ້ນຈຶ່ງໄດ້ທູນວ່າ, "ເຫດໃດທ່ານໄດ້ຊົງເຮັດຜິດຕໍ່ປະຊາຊົນຂອງພຣະເຈົ້າ? ສຳຫລັບໃນການກ່າວເຊັ່ນນີ້, ກະສັດໄດ້ຊົງເປັນຄືບາງຄົນທີ່ມີ
ຄວາມຜິດ, ເພາະວ່າກະສັດຍັງບໍ່ໄດ້ນຳລູກຊາຍຜູ້ຖືກເນລະເທດກັບມາວັງເລີຍ. 14ດັ່ງນັ້ນພວກເຮົາຈະຕ້ອງຕາຍ, ແລະພວກເຮົາເປັນຄືນ້ຳທີ່ເທ
ເທິງພື້ນດິນ, ທີ່ບໍ່ສາມາດຈະເກັບລວມກັບຄືນມາອີກບໍ່ໄດ້. ແຕ່ພຣະເຈົ້າບໍ່ຊົງທຳລາຍຊີວິດ, ແຕ່ຊົງເຮັດຜິດສຳຫລັບຄົນເຫລົ່ານັ້ນທີ່ຖືກເນລະເທດ
ໄດ້ກັບຄືນມາອີກ.
15ບັດນີ້, ແລ້ວທີ່ຂ້ານ້ອຍໄດ້ທູນເລື່ອງນີ້ຕໍ່ກະສັດເຈົ້ານາຍຂອງຂ້ານ້ອຍ, ກໍເພາະວ່າພວກປະຊາຊົນໄດ້ເຮັດໃຫ້ຂ້ານ້ອຍຢ້ານ. ດັ່ງນັ້ນສາວໃຊ້
ຂອງເພິ່ນໄດ້ຄິດວ່າ,"ບັດນີ້ຂ້ອຍຈະທູນກະສັດ. ບາງທີກະສັດຈະຊົງເຮັດຕາມຄຳຂໍຂອງສາວໃຊ້ເພິ່ນ. 16ເພາະວ່າກະສັດຈະຊົງຟັງເຮົາ, ເພື່ອທີ່ຈະ
ຊົງຊ່ວຍກູ້ສາວໃຊ້ຂອງເພິ່ນຈາກມືຂອງຜູ້ຈະທຳລາຍທັງຕົວຂ້ານ້ອຍ, ແລະລູກຊາຍຂອງຂ້ານ້ອຍຈາກມໍລະດົກຂອງພຣະເຈົ້າ." 17ແລ້ວສາວໃຊ້
ຂອງເພິ່ນໄດ້ອະທິຖານວ່າ, "ຂ້າແດ່ພຣະຢາເວ, ຂໍໃຫ້ສັນຍາຂອງກະສັດເຈົ້ານາຍຂອງຂ້ານ້ອຍເປັນທີ່ພັກພິງປຽບດັ່ງເທວະດາຂອງພຣະເຈົ້າ,
ເພາະກະສັດເຈົ້ານາຍຂອງຂ້ານ້ອຍຜູ້ຊົງຮູ້ຄວາມດີ ແລະຊົ່ວ.' ຂໍພຣະຢາເວພຣະເຈົ້າຂອງທ່ານສະຖິດກັບທ່ານເຖີດ."
18ແລ້ວກະສັດໄດ້ຊົງກ່າວກັບຍິງນັ້ນວ່າ, "ຈົ່ງຢ່າປິດບັງສິ່ງໃດຈາກເຮົາທີ່ເຮົາເອງຈະຖາມເຈົ້າ." ຜູ້ຍິງນັ້ນໄດ້ທູນວ່າ, "ຂໍກະສັດເຈົ້ານາຍຂອງຂ້າ
ນ້ອຍກ່າວເຖີດ." 19ກະສັດຈຶ່ງໄດ້ກ່າວວ່າ, "ມືຂອງໂຢອາບກ່ຽວຂ້ອງກັບເຈົ້າດ້ວຍໃນເລື່ອງທັງຫມົດນີ້ແມ່ນບໍ່?" ຜູ້ຍິງນັ້ນໄດ້ທູນຕອບ ແລະໄດ້ກ່າວ
ວ່າ, "ຂ້າແດ່ກະສັດ, ເຈົ້ານາຍຂອງຂ້ານ້ອຍທ່ານຊົງມີຊີວິດຢູ່ ບໍ່ມີໃຜຫນີໄປທາງຂວາມືຫລືທາງຊ້າຍມືໄດ້ຈາກທຸກສິ່ງທີ່ກະສັດເຈົ້ານາຍຂອງຂ້າ
ນ້ອຍໄດ້ກ່າວໄວ້ນັ້ນແລ້ວ. 20ເຂົານັ້ນແຫລະໂຢອາບຜູ້ຮັບໃຊ້ທ່ານທີ່ໄດ້ເຮັດສິ່ງນີ້ກໍເພື່ອຈະແກ້ໄຂສະຖານະການທີ່ກຳລັງເປັນຢູ່ນີ້. ເຈົ້ານາຍຂອງຂ
◌ານ້ອຍຊົງມີສະຕິປັນຍາ, ເຫມືອນດັ່ງສະຕິປັນຍາຂອງເທວະດາຂອງພຣະເຈົ້າ, ແລະຊົງຮູ້ທຸກສິ່ງທີ່ກຳລັງເກີດຂຶ້ນໃນແຜ່ນດິນ."
21ດັ່ງນັ້ນກະສັດຈຶ່ງໄດ້ກ່າວສັ່ງໂຢອາບວ່າ, "ເບິ່ງເຖີດ ເຮົາຈະເຮັດສິ່ງນີ້. ດັ່ງນັ້ນຈົ່ງໄປ, ແລະນຳອັບຊາໂລມຊາຍຫນຸ່ມຄົນນັ້ນກັບມາ." 22ດັ່ງນັ້ນໂຢ
ອາບກໍໄດ້ນອນລົງກົ້ມຫນ້າລົງພື້ນດິນ ແລະຖວາຍຄວາມຈົງຮັກພັກດີຕໍ່ກະສັດ. ໂຢອາບໄດ້ທູນວ່າ, "ມື້ນີ້ຜູ້ຮັບໃຊ້ຂອງທ່ານຮູ້ວ່າ, ຂ້ານ້ອຍ,ໄດ້ຮັບ
ຄວາມໂປດປານຈາກກະສັດ,ເຈົ້ານາຍຂອງຂ້ານ້ອຍໃນການທີ່ກະສັດໄດ້ຊົງພໍໃຈ ຕາມຄຳທູນຂໍຂອງຜູ້ຮັບໃຊ້ຂອງທ່ານ."
23ດັ່ງນັ້ນ, ໂຢອາບຈຶ່ງໄດ້ລຸກຂຶ້ນໄປຍັງເມືອງເກຊູ, ແລະໄດ້ພາອັບຊາໂລມມາຍັງນະຄອນເຢຣູຊາເລັມ. 24ກະສັດໄດ້ກ່າວວ່າ, "ໃຫ້ເຂົາກັບໄປວັງ
ຂອງເຂົາເຖີດ, ແຕ່ຢ່າໃຫ້ເຂົ້າເຝົ້າເຮົາ." ດັ່ງນັ້ນອັບຊາໂລມກໍໄດ້ກັບໄປຢູ່ວັງຂອງເພິ່ນ, ແຕ່ບໍ່ໄດ້ເຂົ້າເຝົ້າຕໍ່ຫນ້າກະສັດ.
25ບັດນີ້ ອິດສະຣາເອນບໍ່ມີຜູ້ໃດໄດ້ຮັບການຍົກຍ້ອງໃນເລື່ອງຄວາມສະງ່າງາມຫລາຍເທົ່າກັບອັບຊາໂລມ. ນັບແຕ່ປາຍຕີນຈົນຮອດຫົວຂອງເພິ່ນ
ເພິ່ນບໍ່ຊົງມີຕຳນິເລີຍ. 26ເມື່ອເພິ່ນຊົງຕັດຜົມໃນທ້າຍປີຂອງທຸກປີ, ເພາະວ່າຜົມເທິງຫົວຂອງເພິ່ນມີນ້ຳຫນັກຫລາຍ, ເພິ່ນໄດ້ຊົງຊັ່ງຜົມ ໄດ້ຫນັກ
ປະມານເຖິງສອງກິໂລ ຊຶ່ງໄດ້ຊັ່ງຕາມນ້ຳມາດຕະຖານຂອງກະສັດ. 27ອັບຊາໂລມໄດ້ມີລູກຊາຍສາມຄົນ, ແລະລູກສາວຄົນຫນຶ່ງຊື່ຕາມາ, ນາງ
ເປັນຍິງທີ່ງາມ.
28ອັບຊາໂລມໄດ້ຢູ່ໃນນະຄອນເຢຣູຊາເລັມເຖິງສອງປີເຕັມ, ໂດຍບໍ່ໄດ້ເຂົ້າເຝົ້າຕໍ່ຫນ້າກະສັດ. 29ແລ້ວອັບຊາໂລມກໍໄດ້ສົ່ງຄົນໄປນຳຫາໂຢອາບໃຫ້
ນຳເພິ່ນເຂົ້າໄປເຝົ້າກະສັດ, ແຕ່ໂຢອາບບໍ່ໄດ້ມາຫາເພິ່ນ. ດັ່ງນັ້ນເພິ່ນກໍໄດ້ຊົງສົ່ງຄົນໄປຄັ້ງທີ່ສອງ, ແຕ່ໂຢອາບກໍບໍ່ໄດ້ມາອີກ.
30 1 ດັ່ງນັ້ນ ອັບຊາໂລມຈຶ່ງໄດ້ຊົງສັ່ງ ພວກຄົນຮັບໃຊ້ຂອງເພິ່ນວ່າ, "ເບິ່ງແມ, ນາຂອງໂຢອາບຢູ່ຕໍ່ຈາກນາຂອງເຮົາ. ເຂົາມີເຂົ້າບາເລທີ່ນັ້ນ ຈົ່ງໄປ
ເອົາໄຟເຜົາ." ພວກຄົນຮັບໃຊ້ຂອງອັບຊາໂລມກໍໄດ້ເອົາໄຟເຜົານາ. 31ແລ້ວໂຢອາບກໍໄດ້ລຸກຂຶ້ນໄປຫາອັບຊາໂລມທີ່ວັງຂອງເພິ່ນ, ແລະໄດ້ທູນຖາມ
ເພິ່ນວ່າ, "ເປັນຫຍັງພວກຄົນຮັບໃຊ້ຂອງທ່ານຈຶ່ງເອົາໄຟເຜົານາຂອງຂ້ານ້ອຍ?"
32ອັບຊາໂລມໄດ້ຕອບໂຢອາບວ່າ, "ເບິ່ງເຖີດ, ເຮົາສົ່ງຄົນໄປບອກທ່ານວ່າ,"ມານີ້ເຖີດ ເຮົາຈະສົ່ງທ່ານໄປຫາກະສັດທູນວ່າ, "ໃຫ້ຂ້ານ້ອຍມາຈາກ
ເກຊູເຮັດຫຍັງ? ຂ້ານ້ອຍຢູ່ທີ່ນັ້ນກໍດີກວ່າ" ດັ່ງນັ້ນ. ບັດນີ້ຂໍໃຫ້ເຮົາໄດ້ເຂົ້າເຝົ້າຕໍ່ຫນ້າກະສັດ, ແລະຖ້າເຮົາມີຄວາມຜິດ ກໍໃຫ້ເພິ່ນ
ຊົງຂ້າເຮົາ."" 33ດັ່ງນັ້ນໂຢອາບຈຶ່ງໄດ້ເຂົ້າເຝົ້າກະສັດ. ແລະໄດ້ທູນເພິ່ນໃຫ້ຊົງຮູ້ ເມື່ອກະສັດຊົງຮ້ອງຫາອັບຊາໂລມ, ເພິ່ນຈຶ່ງໄດ້ເຂົ້າໄປເຝົ້າກະ
ສັດ ກົ້ມຫນ້າລົງພື້ນດິນຕໍ່ຫນ້າກະສັດ, ແລະກະສັດກໍໄດ້ຊົງຈູບອັບຊາໂລມ.


generated on Tue Jun 17 19:01:42 2025

15 [1]ອັບຊາໂລມໄດ້ຈັດຕຽມລົດເສິກ ແລະມ້າຫລາຍໂຕສຳຫລັບເພິ່ນເອງ, ກັບທະຫານແລ່ນນຳຫນ້າເພິ່ນ ຈຳນວນຫ້າສິບຄົນ.[2]ອັບຊາໂລມໄດ້
ຊົງຕື່ນແຕ່ເຊົ້າ. ຊົງຢືນຢູ່ທີ່ທາງເຂົ້າປະຕູ ຖ້າໃຜມີເລື່ອງຖວາຍກະສັດ,ໃຫ້ຊົງຕັດສິນ ອັບຊາໂລມກໍໄດ້ຮ້ອງຜູ້ນັ້ນ ແລະໄດ້ຖາມວ່າ, "ເຈົ້າມາ
ຈາກເມືອງໃດ?" ແລ້ວເມື່ອເຂົາໄດ້ທູນຕອບວ່າ, "ຜູ້ຮັບໃຊ້ຂອງທ່ານເປັນຄົນເຜົ່າຫນຶ່ງໃນອິດສະຣາເອນ."

[3]ດັ່ງນັ້ນ ອັບຊາໂລມກໍໄດ້ຊົງບອກເຂົາວ່າ, "ເບິ່ງເຖີດ, ຄຳຮ້ອງຂອງເຈົ້າກໍດີ ແລະຖືກຕ້ອງ, ແຕ່ກະສັດບໍ່ໄດ້ຊົງຕັ້ງໃຜໄວ້ໃຫ້ຟັງເຈົ້າ."[4]ອັບຊາໂລມ
ໄດ້ກ່າວເຕີມວ່າ, "ຂ້ານ້ອຍປາຖະຫນາວ່າຂ້ານ້ອຍໄດ້ຮັບແຕ່ງຕັ້ງເປັນຜູ້ພິພາກສາ ໃນແຜ່ນດິນນີ້ ດັ່ງນັ້ນ, ເມື່ອໃຜມີຂໍ້ຂັດແຍ່ງຫລືຕ້ອງການຄຳ
ຕັດສິນ ຈະໄດ້ມາຫາຂ້ານ້ອຍ, ແລະຂ້ານ້ອຍຈະໃຫ້ຄວາມຍຸດຕິທຳແກ່ເຂົາ!"
[5]ດັ່ງນັ້ນ ເລື່ອງນີ້ກໍໄດ້ເກີດຂຶ້ນເມື່ອມີໃຜເຂົ້າມາຫາອັບຊາໂລມເພື່ອກົ້ມກາບອັບຊາໂລມ, ອັບຊາໂລມກໍໄດ້ຍື່ນມືອອກກອດ ແລະຈູບເຂົາ.[6]ອັບຊາ
ໂລມໄດ້ເຮັດແບບນີ້ແກ່ຄົນອິດສະຣາເອນທັງຫມົດ ທີ່ມາເຝົ້າກະສັດເພື່ອຂໍຄຳຕັດສິນ. ດັ່ງນັ້ນອັບຊາໂລມກໍໄດ້ຊະນະໃຈຂອງບັນດາຊາວອິດສະ
ຣາເອນ.
[7]ເມື່ອລ່ວງມາຈົນຮອດທ້າຍປີທີສີ່ທີ່ອັບຊາໂລມ ໄດ້ທູນກະສັດວ່າ,"ຂໍຊົງອະນຸຍາດໃຫ້ຂ້ານ້ອຍໄປ ແລະແກ້ບະ ຊຶ່ງຂ້ານ້ອຍໄດ້ສັນຍາໄວ້ຕໍ່ພຣະຢ
ເວທີ່ເມືອງເຮັບໂຣນ.[8]ເພາະວ່າຜູ້ຮັບໃຊ້ຂອງພຣະອົງໄດ້ສັນຍາໄວ້ເມື່ອຕອນຍັງຢູ່ໃນເມືອງເກຊູໃນຊີເຣຍວ່າ, "ຖ້າພຣະຢາເວຊົງນຳຂ້ານ້ອຍກັບ
ມາຍັງນະຄອນເຢຣູຊາເລັມອີກເທື່ອຫນຶ່ງແລ້ວ, ຂ້ານ້ອຍຈະຖວາຍນະມັດສະການພຣະຢາເວ.""
[9]ດັ່ງນັ້ນກະສັດໄດ້ກ່າວຕອບເຂົາວ່າ, "ຈົ່ງໄປເປັນສຸກເຖີດ" ດັ່ງນັ້ນອັບຊາໂລມກໍໄດ້ລຸກຂຶ້ນແລະໄດ້ໄປຍັງເມືອງເຮັບໂຣນ.[10]ແຕ່ແລ້ວອັບຊາໂລມໄດ້
ສົ່ງຜູ້ຊອດແນມໄປທົ່ວອິດສະເອນທຸກເຜົ່າ, ກ່າວວ່າ, "ທັນທີທີ່ພວກທ່ານໄດ້ຍິນສຽງແກດັງຂຶ້ນເມື່ອໃດ, ແລ້ວພວກທ່ານຈົ່ງກ່າວວ່າ,"ອັບຊາໂລມ
ເປັນກະສັດທີ່ເຮັບໂຣນ.""
[11]ອັບຊາໂລມ ໄດ້ເຊີນເອົາສອງຮ້ອຍຄົນ ຈາກນະຄອນເຢຣູຊາເລັມໄປກັບຕົນ, ຄົນເຫລົ່ານີ້ໄດ້ໄປດ້ວຍຄວາມບໍລິສຸດໃຈຂອງພວກເຂົາ. ບໍ່ຮູ້ເລື່ອງ
ທັງຫມົດທີ່ອັບຊາໂລມໄດ້ວາງແຜນໄວ້.[12]ຂະນະເມື່ອອັບຊາໂລມຖວາຍເຄື່ອງບູຊາຢູ່ນັ້ນ, ລາວໄດ້ສົ່ງຄົນໄປເຊີນອາຮີໂຕເຟນຈາກກີໂລເມືອງຂອງ
ເຂົາ. ເຂົາເປັນທີ່ປຶກສາຂອງດາວິດ. ການຄົບຄິດກັນຂອງອັບຊາໂລມກໍເຂັ້ມແຂ້ງຂຶ້ນ, ເພາະປະຊາຊົນທີ່ມາຕິດຕາມອັບຊາໂລມກໍໄດ້ເພີ່ມຫລາຍ
ຂຶ້ນຢ່າງຕໍ່ເນື່ອງ.
[13]ຜູ້ສື່ສານຄົນຫນຶ່ງໄດ້ມາເຝົ້າດາວິດ ທູນວ່າ, "ໃຈຂອງຄົນອິດສະຣາເອນຄ້ອຍຕາມອັບຊາໂລມໄປແລ້ວ."[14]ດັ່ງນັ້ນດາວິດໄດ້ຊົງຮັບສັ່ງແກ່ບັນດາ
ຜູ້ຮັບໃຊ້ທີ່ຢູ່ກັບເພິ່ນທີ່ນະຄອນເຢຣູຊາເລັມວ່າ, "ຈົ່ງລຸກຂຶ້ນ ແລະໃຫ້ເຮົາຫນີໄປເຖີດ, ບໍ່ເຊັ່ນນັ້ນຈະບໍ່ມີໃຜໃນພວກເຮົາໄດ້ຫນີຈາກອັບຊາໂລມ.
ຈົ່ງຕຽມຫນີໄປທັນທີ, ບໍ່ເຊັ່ນນັ້ນ ເຂົາຈະນຳພວກເຮົາທັນ, ແລະນຳເຫດຮ້າຍມາເຖິງພວກເຮົາ ແລະເຂົາຈະທຳລາຍເມືອງນີ້ດ້ວຍຄົມ
ດາບ."[15]ເຫລົ່າຜູ້ຮັບໃຊ້ກະສັດຈຶ່ງໄດ້ທູນກະສັດວ່າ,"ເບິ່ງເຖີດ, ບັນດາຜູ້ຮັບໃຊ້ຂອງທ່ານພ້ອມຈະເຮັດຕາມຊຶ່ງກະສັດເຈົ້ານາຍຂອງພວກຂ້າ
ນ້ອຍຕັດສິນໃຈທຸກປະການ."
[16]ກະສັດກໍໄດ້ຊົງຈາກໄປ ແລະຄົນທັງຫມົດ,ໃນຣາຊສຳນັກຂອງເພິ່ນ,ກໍໄປພ້ອມກັບເພິ່ນ.[17]ກະສັດໄດ້ຊົງຖິ້ມຜູ້ຍິງທີ່ເປັນສາວໃຊ້ໄວ້ສິບຄົນ ໃຫ້
ເຝົ້າຣາຊວັງ, ຫລັງຈາກນັ້ນກະສັດກໍໄດ້ອອກໄປປະຊາຊົນທັງຫມົດກໍໄດ້ຕາມເພິ່ນໄປ ແລະໄດ້ຢູ່ທີ່ບ້ານຢູ່ຫລັງສຸດທ້າຍ.[18]ກອງທັບທັງຫມົດກໍໄດ້
ເດີນທັບໄປກັບເພິ່ນ, ແລະຕໍ່ຫນ້າຂອງເພິ່ນ ບັນດາຄົນເກເຣັດທັງຫມົດ,ແລະຄົນເປເລັດທັງຫມົດ, ກັບຄົນກາດທັງຫມົດ ຫົກຮ້ອຍຄົນທີ່ໄດ້ຕິດ
ຕາມເພິ່ນ ກໍໄດ້ຍ່າງຜ່ານເພິ່ນໄປເຫມືອນກັນ.
[19]ແລ້ວກະສັດຈຶ່ງໄດ້ກ່າວກັບອິດໄຕວ່າ, "ເປັນຫຍັງເຈົ້າຈະໄປກັບພວກເຮົາດ້ວຍ? ຈົ່ງກັບໄປ ແລະຢູ່ກັບກະສັດ,ເພາະພວກເຈົ້າເປັນຄົນຕ່າງດ້າວ
ແລະຖືກເນລະເທດມາດ້ວຍ. ຈົ່ງກັບໄປບ້ານເມືອງຂອງພວກເຈົ້າເຖີດ.[20]ເນື່ອງຈາກພວກເຈົ້າຫາກໍມາຮອດມື້ວານນີ້, ເປັນຫຍັງເຮົາຈະໃຫ້ພວກ
ເຈົ້າເດີນທາງໄປກັບພວກເຮົາດ້ວຍ? ເຮົາເອງກໍຍັງບໍ່ຮູ້ວ່າເຮົາກຳລັງຈະໄປທີ່ໃດ. ດັ່ງນັ້ນຈົ່ງກັບໄປເຖີດ ແລະພາພວກພີ່ນ້ອງຂອງເຈົ້າກັບໄປດ້ວຍ.
ຂໍຄວາມຮັກຫມັ້ນຄົງ ແລະຄວາມຈິງຈົ່ງຢູ່ກັບເຈົ້າເຖີດ."
[21]ແຕ່ອິດໄຕໄດ້ທູນຕອບກະສັດວ່າ, "ພຣະຢາເວຊົງມີຊີວິດຢູ່, ແລະກະສັດເຈົ້ານາຍຂອງຂ້ານ້ອຍຊົງມີຊີວິດຢູ່, ແນ່ນອນທີ່ດຽວ ບໍ່ວ່າເຈົ້ານາຍ
ຂອງຂ້ານ້ອຍໄປທີ່ໃດຜູ້ຮັບໃຊ້ຂອງທ່ານ, ກໍຂໍໄປຢູ່ທີ່ນັ້ນດ້ວຍ, ບໍ່ວ່າຈະເປັນເຫດໃຫ້ມີຊີວິດຢູ່ຫລືຕາຍກໍຕາມ."[22]ດັ່ງນັ້ນດາວິດກໍໄດ້ກ່າວກັບອິດ
ໄຕວ່າ, "ຈົ່ງໄປ ແລະຢູ່ກັບພວກເຮົາຕໍ່ໄປ." ດັ່ງນັ້ນອິດໄຕພ້ອມກັບຄົນຂອງເຂົາ ແລະຄອບຄົວຂອງເຂົາທັງຫມົດທີ່ໄດ້ຢູ່ກັບເຂົາຈຶ່ງເດີນທາງຕໍ່ໄປ.
[23]ຊາວເມືອງທັງຫມົດກໍໄດ້ຮ້ອງໄຫ້ສຽງດັງ ເມື່ອປະຊາຊົນທັງຫມົດໄດ້ຜ່ານຂ້າມໄປຫ້ວຍກິດໂຣນ, ແລະທີ່ກະສັດເອງກໍໄດ້ຂ່າມຜ່ານໄປເຊັ່ນກັນ.
ປະຊາຊົນທັງຫມົດໄດ້ເດີນທາງຕາມເສັ້ນທາງໄປຍັງຖິ່ນແຫ້ງແລ້ງກັນດານ.
[24]ແມ່ນແຕ່ຊາດົກພ້ອມຄົນເລວີທັງຫມົດ, ທີ່ຫາມຫີບພັນທະສັນຍາຂອງພຣະເຈົ້າກໍມາດ້ວຍ. ພວກເຂົາໄດ້ວາງຫີບຂອງພຣະເຈົ້າລົງ, ແລະແລ້ວ
ອາບີອາທາກໍໄດ້ມາຮ່ວມກັບພວກເຂົາດ້ວຍ. ພວກເຂົາໄດ້ຖ້າຈົນປະຊາຊົນທັງຫມົດໄດ້ຜ່ານອອກຈາກເມືອງໄປ.[25]ກະສັດໄດ້ກ່າວກັບຊາດົກວ່າ,
"ຈົ່ງຫາມຫີບຂອງພຣະເຈົ້າກັບເຂົ້າໄປໃນເມືອງເຖີດ ຫາກວ່າພຣະຢາເວຊົງພໍໃຈເຮົາ, ພຣະອົງຈະຊົງນຳເຮົາກັບ ແລະໃຫ້ເຮົາເຫັນທັງຫີບນັ້ນ
ກັບທີ່ຢູ່ຂອງພຣະອົງ.[26]ແຕ່ຖ້າພຣະອົງກ່າວວ່າ,"ເຮົາບໍ່ພໍໃຈເຈົ້າ" ເບິ່ງເຖີດ, ເຮົາຢູ່ທີ່ນີ້, ຂໍພຣະອົງຊົງເຮັດກັບເຮົາຕາມທີ່ພຣະອົງຊົງເຫັນຊອບ
ເຖີດ."
[27]ກະສັດໄດ້ກ່າວກັບຊາດົກປະໂຣຫິດວ່າ, "ທ່ານເປັນຜູ້ທຳນວຍບໍ່ແມ່ນບໍ? ຈົ່ງກັບເຂົ້າໄປໃນເມືອງຢ່າງສະຫງົບ, ພ້ອມກັບລູກຊາຍທັງສອງຂອງ
ທ່ານ, ຄືໂຢນາທານລູກຂອງອາບີອາທາ.[28]ເບິ່ງເຖີດ, ເຮົາຈະລໍຖ້າຢູ່ທີ່ທ່າຂ້າມຂອງອາຣາບາຈົນກວ່າຈະມີຂ່າວມາຈາກພວກທ່ານໃຫ້ເຮົາຮູ້."[29]ດັ່ງ
ນັ້ນຊາດົກກັບອາບີອາທາຈຶ່ງໄດ້ຫາມຫີບພັນທະສັນຍາຂອງພຣະເຈົ້າກັບໄປນະຄອນເຢຣູຊາເລັມ, ແລະພວກເຂົາໄດ້ພັກຢູ່ທີ່ນັ້ນ.
[30]ແຕ່ດາວິດໄດ້ປະຕີນເປົ່າ ແລະໂສກເສົ້າໄປເທິງພູເຂົາຫມາກກອກເທດ, ແລະເພິ່ນຊົງມີຜ້າຄຸມຫົວ. ປະຊາຊົນທັງຫມົດທີ່ຢູ່ກັບເພິ່ນຊົງມີຜ້າຄຸມ
ຫົວ, ແລະພວກເຂົາໄດ້ຍ່າງຂຶ້ນໄປໂດຍຮ້ອງໄຫ້.[31]ມີຄົນໄດ້ທູນດາວິດວ່າ, "ອາຮີໂຕເຟນຢູ່ໃນພວກສົມຄົບຄິດກັບອັບຊາໂລມດ້ວຍ." ດັ່ງນັ້ນດາ
ວິດຈຶ່ງໄດ້ອະທິຖານ, "ຂ້າແດ່ພຣະຢາເວ, ຂໍຊົງປ່ຽນໃຫ້ຄຳປຶກສາຂອງອາຮີໂຕເຟນໃຊ້ການບໍ່ໄດ້ເຖີດ."
[32]ເລື່ອງນີ້ໄດ້ເກີດຂຶ້ນເມື່ອດາວິດໄດ້ມາຮອດສຸດຫົນທາງຊຶ່ງທີ່ນະມັດສະການພຣະເຈົ້າ, ຮູຊາຍຊາວເມືອງອາກກິດໄດ້ເຂົ້າມາເຝົ້າເພິ່ນ, ດ້ວຍເສື້ອ
ຄຸມທີ່ຈີກຂາດ ແລະດິນຢູ່ເທິງຫົວຂອງເຂົາ.[33]ດາວິດໄດ້ກ່າວກັບເຂົາວ່າ, "ຖ້າເຈົ້າຂ້າມໄປກັບເຮົາ, ເຈົ້າຈະເປັນພາລະແກ່ເຮົາ.[34]ແລະກ່າວກັບອັບ
ຊາໂລມວ່າ, "ຂ້າແດ່ກະສັດ, ຂ້ານ້ອຍຂໍຖວາຍຕົວເປັນຂ້າຮັບໃຊ້ຂອງທ່ານ, ດັ່ງທີ່ພວກຂ້ານ້ອຍເປັນຂ້າຮັບໃຊ້ຂອງພໍ່ຂອງທ່ານມາແຕ່ກ່ອນໃດ,
ຂ້ານ້ອຍກໍຂໍເປັນຂ້າຮັບໃຊ້ຂອງທ່ານເຊັ່ນນັ້ນ," ແລ້ວເຈົ້າຈະເຮັດໃຫ້ຄຳປຶກສາຂອງອາຮີໂຕເຟນສັບສົນເພື່ອເຮົາ.

 generated on Tue Jun 17 19:01:42 2025

[35]ຊາໂດກກັບອາບີອາທາພວກປະໂຣຫິດກໍຢູ່ກັບເຈົ້າບໍ່ແມ່ນບໍ? ດັ່ງນັ້ນສິ່ງໃດກໍຕາມ ທີ່ເຈົ້າໄດ້ຍິນໃນຣາຊວັງ, ເຈົ້າຈະຕ້ອງບອກໃຫ້ຊາໂດກກັບອາບີ
ອາທາພວກປະໂຣຫິດຮູ້.
[36]ດູເຖີດ ພວກເຂົາມີລູກຊາຍສອງຄົນຂອງເຂົາຢູ່ດ້ວຍ, ຄື: ອາຮີມາອາດ,ລູກຊາຍຂອງຊາໂດກ, ແລະໂຢນາທານ, ລູກ
ຊາຍຂອງອາບີອາທາ, ທ່ານຈົ່ງໃຊ້ໃຫ້ພວກເຂົາມາບອກເຮົາທຸກເລື່ອງທີ່ທ່ານໄດ້ຍິນ."
[37]ດັ່ງນັ້ນຮູຊາຍ, ເພື່ອນສະໜິດຂອງດາວິດຈຶ່ງໄດ້ກັບເຂົ້າ
ໄປໃນເມືອງ, ພໍດີກັບອັບຊາໂລມໄດ້ມາຮອດ ແລະໄດ້ເຂົ້າສູ່ນະຄອນເຢຣູຊາເລັມ.

 generated on Tue Jun 17 19:01:42 2025

16 1ເມື່ອດາວິດໄດ້ກາຍເນີນພູໄປຫນ້ອຍຫນຶ່ງ, ຊີບາຄົນຮັບໃຊ້ຂອງເມຟີໂບເຊັດກໍໄດ້ເຂົ້າມາເຝົ້າເພິ່ນ ຊີບາມີລໍຄູ່ຫນຶ່ງພ້ອມບັນທຸກເຂົ້າຈີ່ສອງ
ຮ້ອຍກ້ອນ ລູກເກດຫນຶ່ງຮ້ອຍພວງ, ແລະ ຫມາກໄມ້ສົດອີກຫນຶ່ງຮ້ອຍພວງ, ກັບເຫລົ້າອະງຸ່ນເຕັມຫນຶ່ງຖົງ. 2ກະສັດໄດ້ກ່າວກັບຊີບາວ່າ,
"ເຈົ້ານໍາສິ່ງເຫລົ່ານີ້ມາເຮັດຫຍັງ?" ຊີບາໄດ້ທູນຕອບວ່າ,"ລໍຄູ່ນັ້ນເພື່ອຣາຊວົງຈະໄດ້ຊົງຂີ່ ສ່ວນເຂົ້າຈີ່ ແລະຫມາກໄມ້ແຫ້ງສໍາຫລັບພວກຄົນ
ຫນຸ່ມຈະໄດ້ກິນ, ແລະເຫລົ້າອະງຸ່ນເພື່ອຜູ້ທີ່ອິດເມື່ອຍໃນຖິ່ນແຫ້ງແລ້ງກັນດານຈະໄດ້ດື່ມກິນ."

3ກະສັດໄດ້ກ່າວວ່າ, "ຫລານຂອງເຈົ້ານາຍຂອງເຈົ້າຢູ່ທີ່ໃດ?" ຊີບາໄດ້ທູນກະສັດວ່າ, "ເບິ່ງເຖີດ, ທ່ານຊົງຢູ່ໃນນະຄອນເຢຣູຊາເລັມ, ເພາະທ່ານ
ກ່າວວ່າ, "ມື້ນີ້ເຊື້ອສາຍອິດສະຣາເອນຈະຄືນຣາຊອານາຈັກຂອງພໍ່ຂອງເຮົາໃຫ້ແກ່ເຮົາ."" 4ແລ້ວກະສັດໄດ້ກ່າວກັບຊີບາວ່າ, "ແນະນໍາ ບັດນີ້,
ຊັບສິນບັດຂອງເມຟີໂບເຊັດກໍຕົກເປັນຂອງເຈົ້າ." ຊີບາໄດ້ທູນວ່າ, "ຂ້າແດ່ກະສັດເຈົ້ານາຍຂອງຂ້ານ້ອຍ, ຂ້ານ້ອຍຂໍຖວາຍດ້ວຍໃຈຖ່ອມ. ຂໍໃຫ້
ຂ້ານ້ອຍເປັນທີ່ພໍໃຈໃນສາຍຕາຂອງທ່ານ."
5ເມື່ອກະສັດດາວິດໄດ້ມາຍັງເມືອງບາຮູຣິມ, ມີຜູ້ຊາຍຄົນຫນຶ່ງຢູ່ໃນຕະກູນຂອງໂຊນ, ເຂົາໄດ້ອອກມາທີ່ນັ້ນ. ຜູ້ຊາຍຄົນນີ້ມີຊື່ວ່າ ຊີເມອີລູກຊາຍ
ຂອງເກຣາ ເຂົາໄດ້ຍ່າງໄປປ້ອຍດ່າໄປ. 6ເຂົາໄດ້ເອົາຫີນແກວ່ງໃສ່ດາວິດແລະແກວ່ງໃສ່ບັນດາຂ້າລາດສະການຂອງກະສັດ, ຮ້າຍດ່າທະຫານ
ແລະອົງຂະລັກທີ່ຢູ່ຂ້າງຂວາແລະຂ້າງຊ້າຍຂອງກະສັດ.
7ຊີບາອີໄດ້ປ້ອຍດ່າສຽງດັງວ່າ, "ໄປໃຫ້ພົ້ນ ອອກໄປຈາກທີ່ນີ້, ຜູ້ຮ້າຍຂ້າຄົນ, ອາດຊະຍາກອນ! 8ພຣະຢາເວໄດ້ຊົງຕອບສະຫນອງພວກເຈົ້າທຸກ
ຄົນໃນເລື່ອງທີ່ເຈົ້າໄດ້ເຮັດໃຫ້ໂຮຫິດຫລັ່ງໃນເຊື້ອສາຍຂອງໂຊນ, ຜູ້ຊຶ່ງເຈົ້າປົກຄອງແທນຢູ່ນັ້ນ. ພຣະຢາເວໄດ້ຊົງມອບຣາຊອານາຈັກໄວ້ໃນມື
ຂອງອັບຊາໂລມ ລູກຊາຍຂອງເຈົ້າ. ເຈົ້າໄດ້ມາເຖິງຄວາມຈິບຫາຍເພາະເຈົ້າເປັນຜູ້ຮ້າຍຂ້າຄົນ ອາດຊະຍາກອນ."
9ແລ້ວອາບີໄຊລູກຊາຍຂອງນາງເຊຣູອີຢາ,ຈຶ່ງໄດ້ທູນກະສັດວ່າ, "ເປັນຫຍັງໃຫ້ຫມາຕາຍໂຕນີ້ມາປ້ອຍດ່າກະສັດເຈົ້ານາຍຂອງຂ້ານ້ອຍ? ຂໍໃຫ້
ຂ້ານ້ອຍຂ້າມໄປ ແລະຕັດຫົວມັນ." 10ແຕ່ກະສັດໄດ້ກ່າວວ່າ,"ພວກລູກຊາຍຂອງນາງເຊຣູອີຢາເອີຍ, ບໍ່ແມ່ນເລື່ອງຂອງພວກເຈົ້າ? ບາງທີເຂົາກໍາ
ລັງປ້ອຍດ່າເຮົາເພາະພຣະຢາເວໄດ້ກ່າວສັ່ງເຂົາວ່າ,"ຈົ່ງປ້ອຍດ່າດາວິດ" ແລ້ວໃຜຈະສາມາດເວົ້າກັບເຂົາວ່າ, "ເປັນຫຍັງເຈົ້າຈຶ່ງກໍາລັງປ້ອຍດ່າ
ກະສັດ?""
11ດັ່ງນັ້ນດາວິດໄດ້ກ່າວກັບອາບີໄຊ ແລະຜູ້ຮັບໃຊ້ທັງຫມົດຂອງເພິ່ນວ່າ, "ເບິ່ງເຖີດ, ລູກຊາຍຂອງເຮົາ, ຜູ້ທີ່ໄດ້ເກີດຈາກກາຍຂອງເຮົາ ຍັງສະ
ແຫວງຫາຊີວິດຂອງເຮົາ. ຍິ່ງກວ່ານັ້ນ ເປັນຫຍັງຄົນເບັນຢາມິນຄົນນີ້ຈະບໍ່ປາຖະຫນາໃຫ້ເຮົາຈິບຫາຍບໍ? ປ່ອຍເຂົາເຖີດ ໃຫ້ເຂົາປ້ອຍດ່າໄປ,
ເພາະພຣະຢາເວໄດ້ຊົງສັ່ງໃຫ້ເຂົາເຮັດ. 12ບາງທີພຣະຢາເວຈະຊົງເຫັນຄວາມທຸກໃຈຂອງເຮົາ, ແລະພຣະຢາເວຈະຊົງປົດປ່ອຍເຮົາ ແລະຊົດ
ເຊີຍເຮົາດ້ວຍການດີແທນຄໍາປ້ອຍດ່າຂອງເຂົາໃນວັນນີ້."
13ດັ່ງນັ້ນດາວິດຈຶ່ງໄດ້ຊົງໄປຕາມທາງພ້ອມກັບຄົນຂອງເພິ່ນ, ຂະນະທີ່ຊີເມອີກໍໄດ້ຍ່າງຂ້າງເພິ່ນໄປຕາມເນີນພູເຂົາ, ປ້ອຍດ່າ ແລະເອົາຝຸ່ນຫວ່ານ
ໃສ່ ແລະເອົາຫີນແກວ່ງໃສ່ເພິ່ນຂະນະທີ່ຍ່າງໄປ. 14ແລ້ວກະສັດກັບທະຫານທັງປວງທີ່ຢູ່ກັບເພິ່ນກໍເມື່ອຍລ້າ, ແລະເພິ່ນໄດ້ຊົງພັກຜ່ອນເມື່ອພວກ
ເຂົາໄດ້ຢຸດພັກໃນຄືນນັ້ນ.
15ຂະນະທີ່ ອັບຊາໂລມ ແລະປະຊາຊົນອິດສະຣາເອນ ທີ່ໄດ້ຢູ່ກັບພຣະອົງ,ກໍໄດ້ມາຮອດນະຄອນເຢຣູຊາເລັມ, ແລະມີອາຮີໂຕເຟນກໍໄດ້ມາກັບ
ເພິ່ນດ້ວຍ. 16ເລື່ອງນີ້ກໍໄດ້ເກີດຂຶ້ນເມື່ອຮູຊາຍຊາວອາກກິດ, ເພື່ອນຂອງດາວິດ,ໄດ້ເຂົ້າເຝົ້າອັບຊາໂລມວ່າ, "ຂໍກະສັດຈົ່ງຫມັ້ນຍືນ
ຂໍກະສັດຈົ່ງຫມັ້ນຍືນ!"
17ແລະ ອັບຊາໂລມໄດ້ກ່າວກັບຮູຊາຍວ່າ, "ນີ້ຄືຄວາມຈົງຮັກພັກດີຕໍ່ເພື່ອນຂອງທ່ານບໍ່? ເປັນຫຍັງທ່ານບໍ່ໄປກັບເຂົາ?" 18ຮູຊາຍໄດ້ທູນອັບຊາໂລມ
ວ່າ, "ບໍ່! ຜູ້ທີ່ພຣະຢາເວກັບປະຊາຊົນເຫລົ່ານີ້,ກັບຄົນອິດສະຣາເອນທັງຫມົດໄດ້ເລືອກຕັ້ງໃຜໄວ້, ຂ້ານ້ອຍກໍຈະຢູ່ກັບຜູ້ນັ້ນ.
19ຍິ່ງໄປກວ່ານັ້ນ, ຂ້ານ້ອຍຄວນຈະຮັບໃຊ້ໃຜ? ຂ້ານ້ອຍບໍ່ຄວນຮັບໃຊ້ລູກຊາຍຂອງທ່ານບໍ? ຂ້ານ້ອຍໄດ້ຮັບໃຊ້ພໍ່ຂອງທ່ານມາແລ້ວ, ແບບໃດ ກໍ
ຈະຮັບໃຊ້ທ່ານແບບນັ້ນ."
20ແລ້ວອັບຊາໂລມໄດ້ເວົ້າກັບອາຮີໂຕເຟນວ່າ, "ຈົ່ງໃຫ້ຄໍາປຶກສາແກ່ເຮົາວ່າພວກເຮົາຈະເຮັດຈັ່ງໃດດີ." 21ອາຮີໂຕເຟນໄດ້ຕອບອັບຊາໂລມວ່າ,
"ຈົ່ງຫລັບນອນກັບພວກສາວໃຊ້ຂອງພໍ່ຂອງທ່ານ ຊຶ່ງທ່ານໄດ້ຊົງຖິ້ມໄວ້ໃຫ້ເຝົ້າຣາຊວັງ, ແລະ ຄົນອິດສະຣາເອນທັງຫມົດຈະໄດ້ຍິນວ່າທ່ານໄດ້
ເຮັດໃຫ້ຕົນເປັນທີ່ກຽດຊັງຂອງພໍ່ຂອງທ່ານແລ້ວ. ແລ້ວບັນດາມືຂອງຄົນທັງຫມົດທີ່ຢູ່ຝ່າຍທ່ານກໍຈະເຂັ້ມແຂ້ງຂຶ້ນ."
22ດັ່ງນັ້ນພວກເຂົາຈຶ່ງໄດ້ກາງເຕັນໃຫ້ອັບຊາໂລມໄວ້ເທິງດາດຟ້າຫລັງຄາຂອງຣາຊວັງ, ແລະອັບຊາໂລມກໍໄດ້ຊົງຫລັບນອນກັບພວກສາວໃຊ້ຂອງ
ພໍ່ ຂອງທ່ານ ຕໍ່ຫນ້າອິດສະຣາເອນທັງຫມົດ. 23ບັດນີ້ ຄໍາປຶກສາຂອງອາຮີໂຕເຟນທີ່ໄດ້ທູນຖວາຍໃນແຕ່ກ່ອນນັ້ນ ເຫມືອນກັບວ່າເຂົາໄດ້ຮັບຄໍາສັ່ງ
ຂອງພຣະເຈົ້າດ້ວຍເຂົາເອງ. ນັ້ນຄືຄໍາປຶກສາທັງຫມົດຂອງອາຮີໂຕເຟນໄດ້ຮັບພິຈາລະນາທັງດາວິດ ແລະອັບຊາໂລມ.

 generated on Tue Jun 17 19:01:42 2025

17 [1]ແລ້ວອາຮີໂຕເຟນໄດ້ທູນອັບຊາໂລມວ່າ, "ບັດນີ້ຂໍໃຫ້ຂ້ານ້ອຍເລືອກທະຫານຫນຶ່ງຫມື່ນສອງພັນຄົນ, ແລະຂ້ານ້ອຍຈະຍົກໄປໄລ່ຕາມດາ
ວິດໃນຄືນນີ້. [2]ຂ້ານ້ອຍຈະໄປທັນເພິ່ນ ເມື່ອເພິ່ນຍັງເມື່ອຍ ແລະອ່ອນກຳລັງ ແລະຈະເຮັດໃຫ້ເພິ່ນປະຫລາດໃຈດ້ວຍຄວາມຢ້ານ. ທະຫານ
ທັງປວງທີ່ຢູ່ກັບເພິ່ນກໍຈະຫນີໄປ, ຂ້ານ້ອຍກໍຈະຂ້າຟັນກະສັດເທົ່ານັ້ນ. [3]ຂ້ານ້ອຍຈະນຳທະຫານທັງປວງກັບມາເຂົ້າຝ່າຍທ່ານ, ເຫມືອນກັບເຈົ້າ
ສາວກຳລັງມາຫາຜົວຂອງນາງ, ແລະປະຊາຊົນທັງປວງກໍຈະສະຫງົບສຸກພາຍໃຕ້ການປົກຄອງຂອງທ່ານ." [4]ສິ່ງທີ່ອາຮີໂຕເຟນໄດ້ທູນໄດ້ເປັນທີ່ພໍ
ໃຈອັບຊາໂລມ ແລະເປັນທີ່ພໍໃຈແກ່ບັນດາຜູ້ໃຫຍ່ແຫ່ງອິດສະຣາເອນ.

[5]ແລ້ວອັບຊາໂລມໄດ້ກ່າວວ່າ, "ບັດນີ້ຈົ່ງຮ້ອງຮູຊາຍຄົນອາກກິດ,ເຂົ້າມາ, ແລະໃຫ້ເຮົາຟັງວ່າເຂົາຈະເວົ້າຢ່າງໃດ." [6]ເມື່ອຮູຊາຍໄດ້ເຂົ້າມາເຝົ້າ
ອັບຊາໂລມແລ້ວ, ອັບຊາໂລມຈຶ່ງໄດ້ຊີ້ງອະທິບາຍໃຫ້ເຂົາຟັງວ່າອາຮີໂຕເຟນໄດ້ກ່າວ ແລະໄດ້ຖາມຮູຊາຍວ່າ,"ຄວນທີ່ເຮົາຈະເຮັດຕາມຄຳແນະ
ນຳຂອງອາຮີໂຕເຟນຫລືບໍ່? ຖ້າບໍ່, ທ່ານຈົ່ງບອກເຮົາວ່າທ່ານແນະນຳຢ່າງໃດ." [7]ດັ່ງນັ້ນຮູຊາຍໄດ້ທູນອັບຊາໂລມວ່າ, "ຄຳປຶກສາຊຶ່ງອາຮີໂຕເຟນ
ແນະນຳໃນຄັ້ງນີ້ບໍ່ດີ."
[8]ຮູຊາຍໄດ້ທູນຕໍ່ໄປວ່າ, "ທ່ານເອງຊົງຮູ້ແລ້ວວ່າ ພໍ່ຂອງທ່ານ ແລະພວກຂອງທ່ານເປັນເຫລົ່ານັກຮົບ, ແລະຈິດໃຈຂອງພວກເຂົາກຳລັງໂຫດຮ້າຍ,
ແລະພວກເຂົາເປັນເຫມືອນຫມີທີ່ລູກຖືກລັກເອົາໄປໃນທົ່ງ. ພໍ່ຂອງທ່ານຊົງຊຳນານເສິກ, ທ່ານຈະບໍ່ຊົງພັກຢູ່ກັບກອງທັບໃນຄືນນີ້. [9]ເບິ່ງເຖີດ, ເຖິງ
ຂະນະນີ້ເພິ່ນກໍໄດ້ຊົງລີ້ຢູ່ໃນຖ້ຳບາງແຫ່ງຫລືໃນອີກທີ່ຫນຶ່ງ. ແລ້ວສິ່ງນີ້ຈະເກີດຂຶ້ນ ເມື່ອທະຫານຂອງເພິ່ນ ໄດ້ລົ້ມຕາຍໃນການເລີ່ມຈູ່ໂຈມ ໃຜກໍ
ຕາມທີ່ໄດ້ຍິນເລື່ອງນີ້ ກໍຈະກ່າວວ່າ, "ພວກທະຫານທີ່ຕິດຕາມອັບຊາໂລມໄດ້ຖືກຂ້າຕາຍ." [10]ຈາກນັ້ນ ແມ່ນແຕ່ທະຫານທີ່ກ້າຫານທີ່ສຸດ ທີ່ຈິດໃຈ
ເຫມືອນຢ່າງໃຈສິງກໍຈະຢ້ານ ເພາະອິດສະຣາເອນທັງຫມົດຮູ້ວ່າ ພໍ່ຊົງເປັນທະຫານທີ່ກ້າຫານ, ແລະເຫລົ່າທະຫານທີ່ຢູ່ກັບເພິ່ນເຂັ້ມແຂງ
ຫລາຍ.
[11]ດັ່ງນັ້ນ ຂ້ານ້ອຍຂໍທູນໃຫ້ຄຳປຶກສາວ່າ ທ່ານ, ຄວນທີ່ຈະຊົງລວບລວມອິດສະຣາເອນທັງຫມົດ ຕັ້ງແຕ່ເມືອງດານຮອດເມືອງເບເອນເຊບາ, ໃຫ້
ຫລວງຫລາຍດັ່ງຊາຍທີ່ທະເລ, ແລະທ່ານກໍໄປຮົບດ້ວຍທ່ານເອງ. [12]ແລ້ວພວກເຮົາຈະເຂົ້າຮົບກັບເຂົາໃນທີ່ທີ່ພວກເຮົາພົບເຂົາ, ແລະພວກເຮົາຈະ
ເຂົ້າໂຈມຕີເຫມືອນນ້ຳຄ້າງຕົກເຫນືອພື້ນດິນ. ເຮົາຈະບໍ່ໃຫ້ມີໃຜເຫລືອລອດແມ່ນແຕ່ຄົນດຽວ, ຫລືແມ່ນແຕ່ຕົວດາວິດເອງ.
[13]ຖ້າເຂົາຖອຍໄປລວມກັນໃນເມືອງ, ແລ້ວຄົນອິດສະຣາເອນທັງຫມົດກໍຈະເອົາເຊືອກເຂົ້າໄປໃນເມືອງ ແລະເຮົາຈະລາກມັນລົງໄປໃນແມ່ນ້ຳ, ຈົນ
ກະທັ້ງບໍ່ມີໃຜຫາກ້ອນຫີນຈັກກ້ອນຫນຶ່ງພົບເຫັນທີ່ນັ້ນ." [14]ແລ້ວອັບຊາໂລມ ແລະຄົນອິດສະຣາເອນທັງປວງໄດ້ກ່າວວ່າ, "ຄຳປຶກສາຂອງຮູຊາຍ
ຄົນອາກກິດດີກວ່າຄຳປຶກສາຂອງອາຮີໂຕເຟນ." ພຣະຢາເວໄດ້ຊົງຫນູນນຳຄຳປະຕິເສດຕໍ່ຄຳປຶກສາອັນດີຂອງອາຮີໂຕເຟນ ເພື່ອຈະຊົງນຳ
ຄວາມຫລົ້ມຈົມມາຍັງອັບຊາໂລມ.
[15]ແລ້ວຮູຊາຍຈຶ່ງໄດ້ກ່າວກັບຊາໂດກ ແລະອາບີອາທາປະໂຣຫິດທັງສອງວ່າ,"ອາຮີໂຕເຟນໄດ້ໃຫ້ຄຳປຶກສາຢ່າງນັ້ນຢ່າງນີ້ແກ່ອັບຊາໂລມ ແລະ
ພວກຜູ້ໃຫຍ່ຂອງອິດສະຣາເອນ, ແຕ່ຂ້ານ້ອຍໄດ້ໃຫ້ຄຳປຶກສາຢ່າງອື່ນ. [16]ບັດນີ້ຈົ່ງຮີບສົ່ງຄົນໄປທູນດາວິດໃຫ້ຊົງຮູ້ວ່າ,"ຄືນນີ້ຢ່າຊົງພັກໃນທ່າ
ຂ້າມຂອງແມ່ນ້ຳອາຣາບາ, ແຕ່ໃຫ້ຂ້າມໄປໃຫ້ໄດ້ ບໍ່ເຊັ່ນນັ້ນກະສັດຈະຊົງຖືກຈັບໄປພ້ອມກັບປະຊາຊົນທັງຫມົດທີ່ຢູ່ກັບເພິ່ນ.'"
[17]ມີສາວໃຊ້ຄົນຫນຶ່ງໄດ້ເຄີຍໄປ ແລະບອກໃຫ້ທັງສອງຮູ້ ເພາະເຂົາທັງສອງບໍ່ສາມາດຈະສ່ຽງມີຄົນເຫັນໃນເມືອງ. ເມື່ອຜູ້ສື່ສານມາຮອດ ແລ້ວ
ພວກເຂົາກໍໄດ້ໄປ, ແລະໄດ້ທູນກະສັດດາວິດໃຫ້ຊົງຮູ້. [18]ແຕ່ມີເດັກຫນຸ່ມຄົນຫນຶ່ງໄດ້ເຫັນພວກເຂົາໃນຄັ້ງນີ້ ແລະໄດ້ໄປທູນອັບຊາໂລມ. ໃຫ້ຊົງຮູ້
ດັ່ງນັ້ນໂຢນາທານ ແລະອາຮີມາອາດກໍໄດ້ຮີບໄປຢ່າງໄວ ແລະໄດ້ມາເຖິງບ້ານຂອງຜູ້ຊາຍຄົນຫນຶ່ງທີ່ບາຮູຣິມ, ທີ່ມີນ້ຳສ້າງຢູ່ທີ່ຂ້າງບ້ານ ທີ່ພວກ
ເຂົາ, ໄດ້ລົງໄປຢູ່ໃນນ້ຳສ້າງນັ້ນ.
[19]ເມຍຂອງຜູ້ຊາຍຄົນນັ້ນ ກໍໄດ້ເອົາຜ້າມາປູປິດປາກນ້ຳສ້າງ, ແລະກໍໄດ້ຍ້າຍເມັດເຂົ້າຕາກຢູ່ເທິງນັ້ນ ດັ່ງນັ້ນບໍ່ມີໃຜຮູ້ວ່າໂຢນາທານ, ແລະອາຮີ
ມາອາດຢູ່ໃນນ້ຳສ້າງ. [20]ທະຫານຂອງອັບຊາໂລມ ກໍໄດ້ມາຫາຜູ້ຍິງເຈົ້າຂອງບ້ານ ແລະໄດ້ຖາມວ່າ, ອາຮີມາອາດ ແລະໂຢນາທານຢູ່ໃສ?"
ນາງຕອບວ່າ,"ພວກເຂົາໄດ້ຂ້າມແມ່ນ້ຳໄປແລ້ວ." ດັ່ງນັ້ນເມື່ອພວກເຂົາໄດ້ຫາເບິ່ງຮອບໆ ແລະຄົ້ນຫາບໍ່ພົບ, ພວກເຂົາກໍໄດ້ກັບໄປຍັງກຸງເຢຣູຊາ
ເລັມ.
[21]ເລື່ອງນີ້ໄດ້ເກີດຂຶ້ນມາຈາກທີ່ພວກເຂົາເຫລົ່ານັ້ນໄປແລ້ວ ໂຢນາທານ ແລະອາຮີມາອາດໄດ້ຂຶ້ນມາຈາກນ້ຳສ້າງ. ພວກເຂົາໄດ້ໄປທູນກະສັດດາ
ວິດໃຫ້ຊົງຮູ້; ເຂົາທັງສອງໄດ້ທູນດາວິດວ່າ, "ຂໍຊົງລຸກຂຶ້ນ ແລະຮີບຂ້າມແມ່ນ້ຳໄປ ເພາະວ່າອາຮີໂຕເຟນໃຫ້ຄຳປຶກສາຢ່າງນັ້ນຢ່າງນີ້ກ່ຽວກັບ
ທ່ານ." [22]ແລ້ວດາວິດກໍໄດ້ຊົງລຸກຂຶ້ນ ແລະທະຫານທັງຫມົດທີ່ຢູ່ກັບເພິ່ນ, ແລະພວກເຂົາກໍໄດ້ຂ້າມແມ່ນ້ຳຈໍແດນ. ພໍມື້ເຊົ້າກໍບໍ່ມີເຫລືອຈັກຄົນ
ຫນຶ່ງທີ່ຍັງບໍ່ໄດ້ຂ້າມແມ່ນ້ຳຈໍແດນ.
[23]ເມື່ອອາຮີໂຕເຟນໄດ້ເຫັນວ່າບໍ່ມີໃຜເຮັດຕາມຄຳປຶກສາຂອງເຂົາ, ເຂົາກໍໄດ້ຂີ່ລໍ ແລະຈາກໄປຍັງເມືອງຂອງເຂົາ. ຈັດການເລື່ອງຄອບຄົວຂອງ
ເຂົາ,ເຂົ້າທີ່ເຂົ້າທາງ ແລະໄດ້ແຂວນຄໍຕົວເອງ. ເຂົາກໍໄດ້ຕາຍ ແລະໄດ້ຝັງໄວ້ທີ່ອຸບມຸງພໍ່ຂອງເຂົາ.
[24]ແລ້ວດາວິດໄດ້ມາຍັງເມືອງມະຫານາອິມ. ສ່ວນອັບຊາໂລມເອງ, ກໍໄດ້ຂ້າມແມ່ນ້ຳຈໍແດນ, ເພິ່ນລວມທັງຄົນອິດສະຣາເອນທັງຫມົດທີ່ຢູ່ກັບເພິ່ນ
ດ້ວຍ. [25]ອັບຊາໂລມໄດ້ຊົງຕັ້ງອາມາສາເປັນຜູ້ບັນສາການແທນໂຢອາບ. ອາມາສາເປັນລູກຊາຍຂອງເຢເທີຄົນອິດຊະມາເອນທີ່ໄດ້ນອນກັບອາບີ
ກາຍ, ຜູ້ທີ່ເປັນລູກສາວຂອງນາຮາດ, ນ້ອງສາວຂອງນາງເຊຣູອີຢາແມ່ຂອງໂຢອາບ. [26]ແລ້ວຄົນອິດສະຣາເອນ ແລະອັບຊາໂລມ ໄດ້ຕັ້ງຄ້າຍຢູ່ໃນ
ແຜ່ນດິນກີເລອາດ.
[27]ເລື່ອງນີ້ໄດ້ເກີດຂຶ້ນເມື່ອດາວິດໄດ້ມາເຖິງມາຫະນາອິມ, ທີ່ໂຊບີລູກຊາຍຂອງນາຮາດຈາກເມືອງຣັບບາໃນອຳໂມນ, ແລະມາກີລູກຊາຍຂອງອຳ
ມີເອນຈາກໂລເດບາ, ແລະບາກຊີນໄລຊາວກີເລອາດຊາວໂຣເກລີມ, [28]ໄດ້ຂົນທີ່ນອນ ແລະຜ້າຫົ່ມ, ຊາມ ແລະຫມໍ້, ແລະເຂົ້າສາລີ, ແລະແປ້ງບາ
ເລ, ເຂົ້າຂົ້ວ, ຖົ່ວ, ຖົ່ວແດງ, ແລະເມັດຖົ່ວ, [29]ນ້ຳເຜີ້ງ, ເນຍ, ແກະ, ແລະເນຍແຂງທີ່ໄດ້ມາຈາກຝູງສັດ, ດັ່ງນັ້ນດາວິດ ແລະໃຫ້ພວກທະຫານທີ່ຢູ່
ກັບເພິ່ນກໍໄດ້ກິນ. ພວກເຂົາໄດ້ເວົ້າວ່າ, "ພວກທະຫານຫິວ ແລະອ່ອນເພຍ ແລະກະຫາຍຢູ່ໃນຖິ່ນແຫ້ງແລ້ງກັນດານ."

18 1ດາວິດໄດ້ກວດນັບເຫລົ່າທະຫານທີ່ໄດ້ຢູ່ກັບເພິ່ນ ແລະໄດ້ຊົງແຕ່ງຕັ້ງຜູ້ບັງຄັບບັນຊາລະດັບນາຍພັນ ແລະນາຍຮ້ອຍໃຫ້ພວກເຂົາ.2ແລ້ວ
ດາວິດໄດ້ຊົງສົ່ງກອງທັບອອກໄປ, ຫນຶ່ງໃນສາມໃຫ້ຢູ່ພາຍໃຕ້ບັງຄັບບັນຊາຂອງໂຢອາບ, ແລະອີກຫນຶ່ງໃນສາມໃຫ້ຢູ່ພາຍໃຕບັນຊາຂອງ
ອາບີໄຊ ລູກຊາຍຂອງນາງເຊຣູອີຢາ, ນ້ອງຊາຍຂອງໂຢອາບ, ແລະອີກຫນຶ່ງໃນສາມໃຫ້ຢູ່ພາຍໃຕບັງຄັບບັນຊາຂອງອິດໄຕຄົນກາທ. ກະສັດໄດ້
ກ່າວກັບກອງທັບວ່າ, "ເຮົາເອງຈະອອກໄປກັບພວກທ່ານແນ່ນອນດ້ວຍຕົວເຮົາເອງເຊັ່ນກັນ."

3ແຕ່ພວກທະຫານເຫລົ່ານັ້ນໄດ້ທູນວ່າ, "ຂໍທ່ານຢ່າໄດ້ໄປໃນການຕໍ່ສູ້ເລີຍ, ເພາະວ່າຖ້າພວກຂ້ານ້ອຍຈະຫນີໄປ, ພວກເຂົາກໍບໍ່ສົນໃຈພວກຂ້າ
ນ້ອຍ. ຫລືຖ້າພວກຂ້ານ້ອຍຕາຍສັກເຄິ່ງຫນຶ່ງ ພວກເຂົາກໍບໍ່ສົນໃຈພວກຂ້ານ້ອຍ! ແຕ່ທ່ານຊົງມີຄ່າເທົ່າກັບພວກຂ້ານ້ອຍຫນຶ່ງຫມື່ນຄົນ ເພາະ
ສະນັ້ນຂໍທ່ານຊົງຕຽມພ້ອມທີ່ຈະຊ່ວຍພວກຂ້ານ້ອຍຈາກໃນເມືອງຈະດີກວ່າ."4ດັ່ງນັ້ນກະສັດຈຶ່ງໄດ້ກ່າວກັບພວກເຂົາວ່າ, "ເຮົາຈະເຮັດຫຍັງກໍ
ຕາມທີ່ພວກທ່ານເຫັນວ່າດີທີ່ສຸດ." ກະສັດຈຶ່ງໄດ້ຊົງຢືນທີ່ຂ້າງປະຕູເມືອງຂະນະທີ່ທະຫານທັງຫມົດໄດ້ຍ່າງອອກໄປເປັນກອງຮ້ອຍ ແລະເປັນກອງ
ທັບ.
5ກະສັດໄດ້ຊົງບັນຊາໂຢອາບ, ອາບີໄຊ, ແລະອິດໄຕກ່າວວ່າ, "ຈົ່ງເບົາມືກັບຊາຍຫນຸ່ມນັ້ນ, ກັບອັບຊາໂລມເພື່ອເຫັນແກ່ເຮົາເຖີດ." ເຫລົ່າຄົນທັງ
ປວງກໍໄດ້ຍິນຄໍາບັນຊາຊຶ່ງກະສັດສັ່ງແກ່ຜູ້ບັງຄັບບັນຊາທັງຫລາຍດ້ວຍເລື່ອງກ່ຽວກັບອັບຊາໂລມ.
6ດັ່ງນັ້ນ ກອງທັບຈຶ່ງໄດ້ອອກໄປທົ່ວປະເທດເພື່ອສູ້ຮົບກັບຄົນອິດສະຣາເອນ;ການສົງຄາມນັ້ນໄດ້ຂະຫຍາຍເຂົ້າໄປໃນປ່າເອຟຣາອິມ.7ກອງທັບ
ຂອງອິດສະຣາເອນກໍໄດ້ພ່າຍແພ້ແກ່ພວກທະຫານຂອງດາວິດທີ່ນັ້ນ; ໄດ້ມີການຂ້າຟັນກັນຢ່າງຫນັກທີ່ນັ້ນ ໃນມື້ນັ້ນມີທະຫານຕາຍສອງຫມື່ນ
ຄົນ.8ສົງຄາມກໍໄດ້ກະຈາຍໄປທົ່ວປະເທດ, ແລະໄດ້ມີຄົນທີ່ຖືກຂ້າໃນປ່າຫລາຍກ່າວຖືກຂ້າໃນສະຫນາມຮົບ.
9ອັບຊາໂລມໄດ້ໄປພົບພວກທະຫານຂອງດາວິດເຂົ້າ. ອັບຊາໂລມໄດ້ກໍາລັງຊົງຂີ່ລໍຢູ່, ແລະລໍນັ້ນໄດ້ແລ່ນເຂົ້າໄປ ໃຕ້ຕົ້ນໄມ້ໃຫຍ່ຂອງຕົ້ນໂອກ ຫົວ
ຂອງເພິ່ນກໍຊັ່ງຕິດກິ່ງຕົ້ນໂອກແຫນ້ນ. ທ່ານກໍໄດ້ຖືກແຂວນຢູ່ລະວ່າງຟ້າ, ແລະດິນ ຂະນະທີ່ລໍທີ່ທ່ານໄດ້ຂີ່ມານັ້ນໄດ້ແລ່ນກາຍໄປ.10ມີບາງຄົນໄດ້
ມາເຫັນສິ່ງນີ້ ແລະໄດ້ໄປແຈ້ງໃຫ້ໂຢອາບຮູ້ວ່າ, "ແນະນໍາ, ຂ້ານ້ອຍໄດ້ເຫັນອັບຊາໂລມແຂວນຢູ່ທີ່ຕົ້ນໂອກ!"11ໂຢອາບກໍໄດ້ເວົ້າກັບຜູ້ຊາຍ ທີ່
ແຈ້ງໃຫ້ເຂົາກ່ຽວກັບອັບຊາໂລມ,"ເບິ່ງເຖີດ! ເຈົ້າເຫັນພະອົງແລ້ວ! ເປັນຫຍັງເຈົ້າຈຶ່ງບໍ່ໄດ້ຟັງເພິ່ນໃຫ້ຕົກພື້ນດິນ? ເຮົາກໍຈະໄດ້ໃຫ້ເງິນສິບ
ຫລຽນກັບສາຍແອວແກ່ເຈົ້າ."
12ຜູ້ຊາຍຄົນນັ້ນໄດ້ຕອບໂຢອາບວ່າ, "ເຖິງແມ່ນວ່າຂ້ານ້ອຍໄດ້ຮັບເງິນຫນຶ່ງພັນຫລຽນ, ຂ້ານ້ອຍຈະບໍ່ເດ່ມືອອກທໍາຮ້າຍລູກຂອງກະສັດ, ເພາະ
ວ່າພວກເຮົາໄດ້ຍິນກະສັດໄດ້ຊົງບັນຊາທ່ານ, ອາບີໄຊ, ແລະ ອິດໄຕວ່າ, "ຈະບໍ່ມີໃຜແຕະຕ້ອງອັບຊາໂລມຊາຍຫນຸ່ມນັ້ນ."13ຖ້າຂ້ານ້ອຍຈະສ່ຽງ
ຊີວິດຂອງຂ້ານ້ອຍໂດຍບໍ່ຖືກຕ້ອງ (ແລະບໍ່ມີຫຍັງປິດບັງໃຫ້ພົ້ນກະສັດ), ທ່ານເອງກໍຈະຖິ້ມຂ້ານ້ອຍ."
14ແລ້ວໂຢອາບຈຶ່ງໄດ້ກ່າວວ່າ, "ເຮົາບໍ່ຄວນເສຍເວລາກັບເຈົ້າເຊັ່ນນີ້." ດັ່ງນັ້ນເຂົາກໍໄດ້ຈັບຫອກສາມແງ່ມແທງເຂົ້າໄປໃນຫົວໃຈຂອງອັບຊາໂລມ,
ຂະນະທີ່ເພິ່ນຍັງຊົງມີຊີວິດຢູ່ ແລະກໍາລັງແຂວນຕິດຢູ່ເທິງຕົ້ນໂອກ.15ແລ້ວທະຫານຫນຸ່ມສິບຄົນທີ່ຖືເຄື່ອງສູ້ຮົບຂອງໂຢອາບ ກໍໄດ້ລ້ອມອັບຊາໂລມ
ໄວ້, ໄດ້ຈູ່ໂຈມເພິ່ນ, ແລະໄດ້ປະຫານເພິ່ນ.
16ແລ້ວໂຢອາບກໍໄດ້ເປົ່າແກ, ແລະກອງທັບກໍໄດ້ກັບຈາກການໄລ່ຕາມອິດສະຣາເອນ, ເພາະໂຢອາບໄດ້ຢຸດກອງທັບໄວ້.17ພວກເຂົາກໍໄດ້ນໍາອັບຊາ
ໂລມມາ ແລະໄດ້ໂຍນລົງໄປໃນຂຸມໃຫຍ່ໃນປ່າ; ພວກເຂົາໄດ້ຝັງຮ່າງຂອງອັບຊາໂລມພາຍໃຕ້ຫີນຫ້ອງໃຫຍ່, ຂະນະທີ່ຄົນອິດສະຣາເອນທັງ
ຫມົດຕ່າງກໍຫນີກັບໄປທີ່ຢູ່ຂອງຕົນ.
18ບັດນີ້ອັບຊາໂລມ, ໃນຂະນະທີ່ຍັງຊົງມີຊີວິດຢູ່ນັ້ນ, ໄດ້ຊົງຕັ້ງເສົາໄວ້ສໍາຫລັບເພິ່ນເອງທີ່ພູເຂົາຂອງກະສັດ, ເພາະເພິ່ນໄດ້ຊົງກ່າວວ່າ, "ເຮົາບໍ່ມີ
ລູກຊາຍທີ່ຈະສືບຄວາມຊົງຈໍາຂອງຊື່ຂອງເຮົາ." ດັ່ງນັ້ນກໍໄດ້ມີການຮ້ອງເສົານັ້ນຕາມຊື່ຂອງເພິ່ນ, ເຂົາໄດ້ຮ້ອງກັນວ່າ ອານຸສາວະລີອັບຊາໂລມ
ຈົນທຸກມື້ນີ້.
19ແລ້ວອາຮີມາລູກຊາຍຂອງຊາດົກກ່າວວ່າ, "ຂໍໃຫ້ຂ້ານ້ອຍແລ່ນນໍາຂ່າວດີໄປທູນກະສັດ, ເຖິງການທີ່ພຣະຢາເວຊົງຊ່ວຍກູ້ທ່ານໃຫ້ພົ້ນຈາກມື
ສັດຕູຂອງທ່ານ."20ໂຢອາບກໍໄດ້ເວົ້າກັບເຂົາວ່າ, "ທ່ານຢ່າເປັນຄົນນໍາຂ່າວໄປໃນມື້ນີ້ເລີຍ; ທ່ານຈົ່ງນໍາຂ່າວໃນມື້ຫນ້າເຖີດ. ມື້ນີ້ທ່ານຢ່ານໍາຂ່າວ
ເລີຍ ເພາະລູກຊາຍຂອງກະສັດໄດ້ຊົງເສຍຊີວິດຢູ່ແລ້ວ."
21ແລ້ວໂຢອາບກໍໄດ້ສັ່ງ ຊາວເອທີໂອເປຍຄົນຫນຶ່ງວ່າ, "ຈົ່ງໄປທູນກະສັດໃຫ້ຊົງຮູ້ ຕາມຕາມສິ່ງທີ່ເຈົ້າເຫັນ." ຊາວເອທີໂອເປຍນັ້ນກໍໄດ້ກົ້ມກາບ
ໂຢອາບ. ແລ້ວກໍໄດ້ແລ່ນໄປ22ແລ້ວອາຮີມາອາດລູກຊາຍຂອງຊາດົກ ຈຶ່ງໄດ້ກ່າວກັບໂຢອາບອີກວ່າ, "ຂໍຢ່າໄດ້ຄໍານຶງເຖິງສິ່ງທີ່ຈະເກີດຂຶ້ນເລີຍ, ຂໍ
ໃຫ້ຂ້ານ້ອຍແລ່ນຕາມຊາວເອທີໂອເປຍຄົນນັ້ນໄປດ້ວຍ." ໂຢອາບໄດ້ຕອບວ່າ, "ເປັນຫຍັງເຈົ້າຈຶ່ງຢາກແລ່ນ, ລູກຊາຍຂອງເຮົາເອີຍ, ເພາະວ່າ
ເຈົ້າຈະບໍ່ໄດ້ຮັບຮາງວັນຫຍັງເລີຍ ຈາກການສົ່ງຂ່າວນີ້ບໍ່ແມ່ນບໍ?"ອາຮີມາອາດໄດ້ຕອບວ່າ,23"ບໍ່ວ່າຈະມີຫຍັງເກີດຂຶ້ນກໍຕາມ ຂ້ານ້ອຍກໍຈະຂໍ
ແລ່ນໄປ," ດັ່ງນັ້ນໂຢອາບຈຶ່ງໄດ້ບອກເຂົາວ່າ, "ຈົ່ງແລ່ນໄປເຖີດ" ແລ້ວອາຮີມາອາດກໍໄດ້ແລ່ນໄປຕາມທາງຮ້ອມພູຈໍແດນ, ແລະໄດ້ແລ່ນກາຍ
ຊາວເອທີໂອເປຍໄປ.
24ຂະນະນັ້ນດາວິດ ໄດ້ຢູ່ລະຫວ່າງທາງໃນ ແລະທາງນອກປະຕູເມືອງ. ມີທະຫານຍາມໄດ້ຂຶ້ນໄປຢູ່ເທິງຫລັງຄາ ປະຕູກໍາແພງເມືອງ. ເມື່ອເຂົາໄດ້
ແນມເບິ່ງ, ເຂົາໄດ້ເຫັນຜູ້ຊາຍຄົນຫນຶ່ງ,ກໍາລັງແລ່ນໃກ້ເຂົ້າມາຄົນດຽວ.25ທະຫານຍາມຄົນນັ້ນກໍໄດ້ຮ້ອງສຽງດັງ ແລະໄດ້ທູນກະສັດ.ແລະກະ
ສັດໄດ້ກ່າວວ່າ."ຖ້າເຂົາມາຄົນດຽວ, ກໍມີຂ່າວໃນປາກຂອງເຂົາ." ຜູ້ຊາຍກໍໄດ້ເຂົ້າມາໃກ້ ແລະໃກ້ກັບເມືອງ.
26ແລ້ວທະຫານຍາມກໍໄດ້ສັງເກດເຫັນ ຊາຍອີກຄົນຫນຶ່ງກໍາລັງແລ່ນມາ, ແລະ ທະຫານຍາມກໍໄດ້ຮ້ອງບອກ ໄປທີ່ນາຍປະຕູເມືອງ; ເຂົາໄດ້ເວົ້າ
ວ່າ, "ເບິ່ງແມ, ມີຜູ້ຊາຍອີກຄົນຫນຶ່ງແລ່ນມາຄົນດຽວ." ກະສັດໄດ້ກ່າວວ່າ, "ເຂົາກໍເປັນຄົນນໍາຂ່າວມາດ້ວຍ."27ດັ່ງນັ້ນທະຫານຍາມນັ້ນໄດ້ທູນ
ວ່າ, "ຂ້ານ້ອຍຄິດວ່າຄົນທີ່ແລ່ນມາກ່ອນຄື ອາຮີມາອາດລູກຊາຍຊາດົກ." ກະສັດໄດ້ກ່າວວ່າ, "ເຂົາເປັນຄົນດີ ເຂົາກໍາລັງມາພ້ອມກັບຂ່າວດີ."
28ແລ້ວອາຮີມາອາດໄດ້ຮ້ອງ ແລະໄດ້ທູນກະສັດວ່າ, "ຂໍຄວາມໂຊກດີມີແດ່ທຸກຄົນ." ເຂົາກໍໄດ້ກົ້ມລົງກາບຕໍ່ຫນ້າກະສັດ ກົ້ມຫນ້າລົງພື້ນ ແລະ
ໄດ້ທູນວ່າ, "ສັນລະເສີນແດ່ພຣະຢາເວ ພຣະເຈົ້າຂອງຂ້ານ້ອຍ! ພຣະອົງໄດ້ຊົງມອບ ບັນດາຜູ້ທີ່ຍົກມືຂອງພວກເຂົາ ຕໍ່ສູ້ກັບກະສັດເຈົ້ານາຍ
ຂອງຂ້ານ້ອຍແລ້ວ."29ດັ່ງນັ້ນ ກະສັດໄດ້ກ່າວຖາມວ່າ, "ອັບຊາໂລມ ຊາຍຫນຸ່ມຄົນນັ້ນສະບາຍດີບໍ?" ອາຮີມາອາດໄດ້ທູນຕອບວ່າ,"ຂ້າແດ່ກະ
ສັດ, ເມື່ອໂຢອາບໄດ້ໃຊ້ຂ້ານ້ອຍ ຜູ້ຮັບໃຊ້ຂອງກະສັດມາ, ຂ້ານ້ອຍໄດ້ເຫັນການສັບສົນຢ່າງຫລາຍ, ແຕ່ຂ້ານ້ອຍບໍ່ຮູ້ເລື່ອງນັ້ນເລີຍ."30ກະສັດ
ໄດ້ກ່າວວ່າ, "ຈົ່ງຍ່າງມາຂ້າງໆ ແລະມາຢືນບ່ອນນີ້." ດັ່ງນັ້ນອາຮີມາອາດຈຶ່ງໄດ້ຍ່າງມາ, ແລະໄດ້ຢືນຢູ່.

[31]ຊາວເອທີໂອເປຍກໍໄດ້ມາຮອດ ແລະໄດ້ທູນວ່າ, "ມີຂ່າວດີຖວາຍແດ່ກະສັດເຈົ້ານາຍຂອງຂ້ານ້ອຍ, ເພາະໃນມື້ນີ້ພຣະຢາເວ ໄດ້ຊົງແກ້ແຄ້ນໃຫ້
ທ່ານ ໄດ້ຊົງພົ້ນຈາກມືຂອງບັນດາຜູ້ທີ່ໄດ້ລຸກຂຶ້ນຕໍ່ສູ້ທ່ານ."
[32]ແລ້ວກະສັດໄດ້ກ່າວຖາມ ຊາວເອທີໂອເປຍນັ້ນວ່າ, "ອັບຊາໂລມຊາຍໜຸ່ມນັ້ນສະ
ບາຍດີບໍ່?" ຊາວເອທີໂອເປຍນັ້ນໄດ້ທູນຕອບວ່າ, "ຂໍໃຫ້ບັນດາສັດຕູຂອງກະສັດ ເຈົ້ານາຍຂອງຂ້ານ້ອຍ, ແລະຄົນທັງປວງທີ່ໄດ້ລຸກຂຶ້ນທຳ
ຮ້າຍທ່ານ ໃຫ້ເປັນຄືຊາຍໜຸ່ມຄົນນັ້ນເຖີດ."
[33]ແລ້ວກະສັດໄດ້ຊົງທຸກໃຈຫລາຍ, ແລະເພິ່ນໄດ້ຂຶ້ນໄປ ເທິງຫ້ອງທີ່ຢູ່ເໜືອປະຕູ ແລະຊົງໂສກ
ເສົ້າ. ຂະນະທີ່ເພິ່ນໄປເພິ່ນຊົງເສຍໃຈໄດ້ກ່າວວ່າ, "ໂອ ອັບຊາໂລມລູກພໍ່, ລູກພໍ່, ອັບຊາໂລມເອີຍ, ພໍ່ເອງຢາກຈະຕາຍແທນເຈົ້າ, ໂອ ອັບຊາໂລມ
ລູກພໍ່, ລູກພໍ່!"


generated on Tue Jun 17 19:01:42 2025

# 19

1ໂຢອາບໄດ້ຮັບການບອກກ່າວວ່າ, "ເບິ່ງເຖີດ ກະສັດໄດ້ຊົງໂສກເສົ້າ ແລະໄດ້ໄວ້ທຸກເພື່ອອັບຊາໂລມ."2ເພາະສະນັ້ນ ໄຊຊະນະໃນມື້ນັ້ນກໍ
ໄດ້ກາຍເປັນການໄວ້ທຸກຂອງທະຫານທັງປວງ, ເພາະໃນມື້ນັ້ນພວກທະຫານໄດ້ຍິນວ່າ, "ກະສັດໄດ້ຊົງທຸກໃຈເພາະລູກຊາຍຂອງເພິ່ນ."

3ໃນມື້ນັ້ນພວກທະຫານ ໄດ້ລັກເຂົ້າມາໃນເມືອງຢ່າງງຽບໆ, ຄືກັບພວກທະຫານທີ່ລັກໜີມາຢ່າງໜ້າລະອາຍ ເມື່ອພວກເຂົາໄດ້ໜີເສິກກັບ
ມາ.4ກະສັດໄດ້ຊົງຄຸມໜ້າ ແລະໄດ້ຊົງໂສກເສົ້າ ແລະຊົງຈົ່ມສຽງດັງວ່າ, "ໂອ ອັບຊາໂລມລູກເອີຍ, ໂອ ອັບຊາໂລມລູກຂອງພໍ່, ລູກຂອງພໍ່”
5ໂຢອາບໄດ້ເຂົ້າໄປ ໃນທີ່ພັກຂອງກະສັດ ແລະເວົ້າຕໍ່ເພິ່ນວ່າ, "ມື້ນີ້ທ່ານໄດ້ຊົງເຮັດໃຫ້ຜູ້ຮັບໃຊ້ ທະຫານທັງໝົດຂອງທ່ານ ໄດ້ຮັບຄວາມລະ
ອາຍ ພວກເຂົາໄດ້ຊ່ວຍຊີວິດຂອງທ່ານໃນມື້ນີ້, ທັງຊີວິດຂອງບັນດາລູກຊາຍ, ແລະລູກສາວ, ແລະຊີວິດຂອງບັນດາເມຍ, ແລະຊີວິດຂອງບັນດາ
ສາວໃຊ້ຂອງທ່ານ,6ເພາະວ່າທ່ານໄດ້ຊົງຮັກຜູ້ທີ່ກຽດຊັງທ່ານ, ແລະໄດ້ຊົງກຽດຊັງຜູ້ຮັກທ່ານ. ເພາະໃນມື້ນີ້ທ່ານໄດ້ຊົງເຮັດໃຫ້ເປັນທີ່ຮູ້ແລ້ວວ່າ
ບັນດານາຍທະຫານ ແລະທະຫານທັງຫລາຍ ບໍ່ມີຄ່າສຳຫລັບທ່ານ. ໃນມື້ນີ້ຂ້ານ້ອຍເຊື່ອວ່າຖ້າ ອັບຊາໂລມ ຍັງມີຊີວິດຢູ່, ແລະພວກຂ້ານ້ອຍທັງ
ຫລາຍໄດ້ຕາຍໝົດນັ້ນ, ທ່ານກໍຄົງຈະພໍໃຈ.
7ບັດນີ້ຂໍທ່ານຊົງລຸກຂຶ້ນ ແລະຂໍອອກໄປກ່າວໃຫ້ກຳລັງໃຈ ແກ່ເຫລົ່າທະຫານຂອງທ່ານ, ເພາະຂ້ານ້ອຍໄດ້ສາບານ ໃນພຣະນາມພຣະຢາເວວ່າ,
ຖ້າທ່ານບໍ່ມາ, ຈະບໍ່ມີຊາຍຈັກຄົນໜຶ່ງ ຄ້າງຢູ່ກັບທ່ານໃນຄືນນີ້. ນັ້ນກໍຈະຮ້າຍແຮງຍິ່ງກວ່າເຫດຮ້າຍອື່ນໆ ທັງໝົດ ຊຶ່ງໄດ້ບັງເກີດແກ່ທ່ານຕັ້ງ
ແຕ່ຍັງນ້ອຍ ມາຈົນເຖິງບັດນີ້."8ດັ່ງນັ້ນກະສັດກໍໄດ້ຊົງລຸກຂຶ້ນ, ແລະປະທັບທີ່ປະຕູເມືອງ, ແລະປະຊາຊົນທັງປວງ ກໍໄດ້ຮັບການບອກເລົ່າວ່າ,
"ເບິ່ງເຖີດ, ກະສັດໄດ້ຢູ່ທີ່ປະຕູເມືອງ," ປະຊາຊົນທັງຫລາຍກໍໄດ້ມາ ເຂົ້າເຝົ້າຕໍ່ໜ້າຂອງກະສັດ. ຝ່າຍອິດສະຣາເອນນັ້ນ,ຕ່າງກໍໜີໄປຍັງທີ່ອາ
ໄສຂອງຕົນໝົດແລ້ວ.
9ພວກເຂົາຖົກຖຽງກັນທົ່ວໄປໃນປະເທດວ່າ, "ກະສັດເຄີຍຊົງຊ່ວຍກູ້ເຮົາໃຫ້ພົ້ນຈາກມືບັນດາສັດຕູຂອງເຮົາ, ແລະຊົງຊ່ວຍພວກເຮົາໃຫ້ພົ້ນ
ຈາກມືພວກຟີລິດສະຕິນ, ແຕ່ບັດນີ້ທ່ານຊົງໜີອອກຈາກແຜ່ນດິນ ເພາະເຫດແຫ່ງອັບຊາໂລມ.10ອັບຊາໂລມ, ຜູ້ທີ່ເຮົາໄດ້ແຕ່ງຕັ້ງໄວ້
ໃຫ້ເປັນກະສັດປົກຄອງເຮົານັ້ນ ກໍໄດ້ເສຍຊີວິດແລ້ວໃນສົງຄາມ, ດັ່ງນັ້ນເປັນຫຍັງພວກເຈົ້າບໍ່ໄດ້ເວົ້າຫຍັງເລີຍ ໃນເລື່ອງທີ່ຈະທູນເຊີນກະສັດໃຫ້
ກັບຄືນມາປົກຄອງ?"
11ກະສັດດາວິດໄດ້ສົ່ງຄົນໄປຫາຊາດົກ ແລະອາບີອາທາປະໂຣຫິດທັງສອງ ຮັບສັ່ງວ່າ, "ຈົ່ງເວົ້າກັບພວກຜູ້ອາວຸໂສ ຂອງຄົນຢູດາຍວ່າ, "ເປັນ
ຫຍັງພວກທ່ານຈຶ່ງເປັນຄົນສຸດທ້າຍທີ່ຈະທູນເຊີນ ກະສັດກັບຣາຊວັງຂອງເພິ່ນ, ໃນເມື່ອມີຖ້ອຍຄຳມາຈາກອິດສະຣາເອນ ທັງປວງຊື່ນຊົມເຖິງກະ
ສັດ,ໃຫ້ກັບຣາຊວັງຂອງເພິ່ນ?12ພວກທ່ານເປັນພີ່ນ້ອງຂອງເຮົາ, ເປັນກະດູກ ແລະເນື້ອຂອງເຮົາ. ເປັນຫຍັງພວກທ່ານຈຶ່ງຈະເປັນຄົນສຸດທ້າຍ ທີ່
ຈະທູນເຊີນກະສັດກັບ?"
13ແລ້ວຈົ່ງບອກອາສາມາວ່າ, "ທ່ານບໍ່ໄດ້ເປັນກະດູກ ແລະເນື້ອຂອງເຮົາບໍ່? ຂໍພຣະເຈົ້າຊົງລົງໂທດເຮົາ ແລະຊົງເພີ່ມໂທດນັ້ນ, ຖ້າທ່ານບໍ່ໄດ້ເປັນ
ຜູ້ບັງຄັບບັນຊາ ກອງທັບຕໍ່ໜ້າເຮົາແທນໂຢອາບ ຕັ້ງແຕ່ບັດນີ້ໄປ.""14ດັ່ງນັ້ນທ່ານກໍໄດ້ຊົງຊະນະໃຈຂອງຄົນຢູດາ ທັງປວງລາວກັບຈິດໃຈຂອງຜູ້
ຊາຍຄົນດຽວ. ພວກເຂົາຈຶ່ງໄດ້ສົ່ງຄົນໄປທູນກະສັດວ່າ, "ຂໍທ່ານກັບພ້ອມກັບຜູ້ຮັບໃຊ້ທັງໝົດ."15ດັ່ງນັ້ນກະສັດກໍໄດ້ກັບ ແລະມາຍັງແມ່ນ້ຳຈໍ
ແດນ. ບັດນີ້ຄົນຢູດາກໍໄດ້ພາກັນມາ ທີ່ກິນການເພື່ອຮັບກະສັດ ແລະນຳກະສັດຂ້າມແມ່ນ້ຳຈໍແດນ.
16ຊີເມອີ ລູກຊາຍຂອງເກຣາ, ຄົນເບັນຢາມິນ, ຜູ້ມາຈາກບາຮູຣິມ, ກໍໄດ້ຮີບລົງມາພ້ອມກັບຄົນ ຢູດາ ເພື່ອຈະຮັບກະສັດດາວິດ.17ມີຄົນຈາກເຜົ່າ
ເບັນຢາມິນພ້ອມກັບເຂົາໜຶ່ງພັນຄົນ, ແລະຊີບາຜູ້ຮັບໃຊ້ຂອງໂຊນ, ພ້ອມກັບລູກຊາຍສິບຫ້າຄົນ. ແລະຄົນໃຊ້ອີກຊາວຄົນ ພວກເຂົາກໍໄດ້ຮີບ
ຂ້າມແມ່ນຳຈໍແດນ ຕໍ່ໜ້າກະສັດ.18ພວກເຂົາໄດ້ຂ້າມມາເພື່ອ ນຳຣາຊວົງຂອງກະສັດ ແລະລໍຄອຍເຮັດສິ່ງທີ່ເພິ່ນເຫັນດີ. ຊີເມອີລູກຊາຍຂອງເກ
ຣາ ໄດ້ໂນ້ມຕົວລົງຕໍ່ໜ້າກະສັດ ກ່ອນທີ່ເພິ່ນຈະຂ້າມແມ່ນ້ຳຈໍແດນ.
19ຊີເມອີໄດ້ທູນກະສັດວ່າ, "ຂໍຢ່າງຊົງຖືໂທດ, ການລ່ວງລະເມີດຂອງຂ້ານ້ອຍ, ແລະຂໍຢ່າຊົງຈົດຈຳຄວາມຜິດ ທີ່ຜູ້ຮັບໃຊ້ຂອງທ່ານໄດ້ເຮັດ ລືມ
ໃນມື້ທີ່ກະສັດເຈົ້ານາຍຂອງຂ້ານ້ອຍ ອອກຈາກນະຄອນເຢຣູຊາເລັມ. ຂໍກະສັດ, ຢ່າຊົງຈົດຈຳໄວ້ໃນໃຈ.20ດ້ວຍຜູ້ຮັບໃຊ້ຂອງທ່ານ ຮູ້ແລ້ວວ່າຂ້າ
ນ້ອຍເອງໄດ້ເຮັດບາບ, ເບິ່ງເຖີດ ນີ້ເຫັນເຫດວ່າເປັນຫຍັງໃນມື້ນີ້ ຂ້ານ້ອຍໄດ້ມາເປັນຄົນແລກໃນເຊື້ອສາຍ ໂຢເຊັບ ທັງໝົດ ທີ່ລົງມາຮັບກະສັດ
ເຈົ້ານາຍຂອງຂ້ານ້ອຍ."
21ແຕ່ອາບີໄຊລູກຊາຍຂອງນາງເຊຣູອີຢາໄດ້ຕອບວ່າ, "ຊີເມອີບໍ່ສົມຄວນຕາຍເພາະສິ່ງນີ້, ເພາະເຂົາໄດ້ປ້ອຍດ່າ ຜູ້ທີ່ຮັບການແຕ່ງຕັ້ງຂອງພຣະ
ຢາເວ?"22ແລ້ວດາວິດໄດ້ກ່າວວ່າ, "ລູກຊາຍທັງສອງຂອງນາງເຊຣູອີຢາເອີຍ, ເຮົາມີວຽກຫຍັງກັບທ່ານ, ຊຶ່ງໃນມື້ນີ້ທ່ານຈະມາເດືອດຮ້ອນກັບ
ເຮົາ? ໃນມື້ນີ້ຄວນທີ່ຈະໃຫ້ໃຜໃນອິດສະເອນມີໂທດເຖິງຕາຍບໍ?"23ດັ່ງນັ້ນກະສັດໄດ້ກ່າວກັບຊີເມອີວ່າ, "ເຈົ້າຈະບໍ່ຕາຍ." ແລ້ວກະສັດກໍໄດ້ຊົງ
ໃຫ້ຄຳສັນຍາວ່າ ລາວຊິບໍ່ຖືກປະຫານຊີວິດ.
24ລູກຊາຍຂອງກະສັດໂຊນ ກໍໄດ້ລົງມາຮັບກະສັດ. ເພິ່ນບໍ່ໄດ້ຊົງລ້າງຕີນຫລື ແຖໜວດຂອງເພິ່ນຫລື, ຊົງຊັກເຄື່ອງຂອງເພິ່ນຕັ້ງແຕ່ມື້ທີ່ກະສັດ
ໄດ້ຈາກໄປ, ຈົນວັນທີ່ທ່ານໄດ້ກັບມາໂດຍຢ່າງມີໄຊ.25ດັ່ງນັ້ນເມື່ອເພິ່ນໄດ້ມາ ຍັງນະຄອນເຢຣູຊາເລັມ ເພື່ອຈະຮັບມາກະສັດໄດ້ກ່າວ ຖາມວ່າ,
"ເມຟີໂບເຊັດ ເປັນຫຍັງທ່ານບໍ່ໄດ້ໄປກັບເຮົາ?"
26ລາວຕອບວ່າ, "ຂ້າແດ່ກະສັດ, ເຈົ້ານາຍຂອງຂ້ານ້ອຍ, ຜູ້ຮັບໃຊ້ຂອງຂ້ານ້ອຍໄດ້ຕວະຂ້ານ້ອຍ ເພາະຜູ້ຮັບໃຊ້ຂອງທ່ານໄດ້ບອກເຂົາວ່າ,
"ຂ້ອຍຈະອານລໍໂຕໜຶ່ງເພື່ອຂ້ອຍຈະໄດ້ຂີ່ໄປຕາມກະສັດ, ເພາະວ່າຜູ້ຮັບໃຊ້ຂອງທ່ານພິການ."27ເຂົາກັບໄປທູນກະສັດ ເຈົ້ານາຍຂອງຂ້ານ້ອຍ,
ໃສ່ຮ້າຍຜູ້ຮັບໃຊ້ຂອງພຣະເຈົ້າ ດັ່ງນັ້ນຂໍໄດ້ຊົງເຮັດໃນສິ່ງທີ່ທ່ານຊົງເຫັນວ່າດີ ໃນສາຍຕາຂອງທ່ານເຖີດ.28ເພາະວ່າທຸກຄົນໃນຄອບຄົວຂອງຂ້າ
ນ້ອຍທັງໝົດ ນັ້ນເປັນແຕ່ຄົນທີ່ສົມຄວນຕາຍ ຕໍ່ໜ້າກະສັດເຈົ້ານາຍຂອງຂ້ານ້ອຍ, ແຕ່ທ່ານກໍໄດ້ຊົງແຕ່ຕັ້ງຜູ້ຮັບໃຊ້ ຂອງທ່ານໄວ້ໃນໝູ່ຜູ້ທີ່
ກິນຮ່ວມໂຕະທ່ານ. ຂ້ານ້ອຍຈະມີຄວາມເມດຕາປະການໃດ ທີ່ຈະຮ້ອງທູນຕໍ່ກະສັດ?"
29ແລ້ວກະສັດຈຶ່ງໄດ້ກ່າວກັບເຂົາວ່າ,"ທ່ານຈະເວົ້າເລື່ອງລາວຂອງທ່ານຕໍ່ໄປເຮັດຫຍັງ? ເຮົາໄດ້ຕັດສິນໃຈແລ້ວວ່າ ເມື່ອກະສັດເຈົ້ານາຍຂອງຂ້າ
ນ້ອຍ ໄດ້ກັບສູ່ຣາຊວັງໂດຍມີໄຊເຊັ່ນນີ້ແລ້ວ ກໍໃຫ້ຊີບາຮັບໄປໝົດເຖີດ."30ເມຟີໂບເຊັດຕອບວ່າ, "ໃຫ້ມໍຣະດົກຕົກເປັນຂອງຊີບາໝົດເສຍ,
ການທີ່ທ່ານກັບມາຢ່າງປອດໄພກໍພຽງພໍແລ້ວສຳລັບຂ້ານ້ອຍ."
31ແລ້ວບາກຊິນໄລ ຊາວກີເລອາດກໍໄດ້ລົງມາຈາກໂຣເກລິມ ເພື່ອຂ້າມແມ່ນ້ຳຈໍແດນໄປສົ່ງກະສັດ, ແລະເຂົາໄດ້ສົ່ງກະສັດຂ້າມແມ່ນ້ຳຈໍແດນໄປ.
32ບັດນີ້ ບາກຊິນໄລເປັນຄົນເຖົ້າແກ່ຫລາຍແລ້ວ, ອາຍຸແປດສິບປີ.ເຂົາໄດ້ນຳສະບຽງອາຫານ ມາຖວາຍກະສັດຂະນະເພິ່ນຢູ່ທີ່ມະຫານາອິມ,

 generated on Tue Jun 17 19:01:42 2025

ເພາະເຂົາເປັນຄົນຮັ່ງມີຫລາຍ.[33]ກະສັດຈຶ່ງໄດ້ກ່າວກັບບາກຊິນໄລວ່າ, "ຈົ່ງຂ້າມມາຢູ່ກັບເຮົາ, ແລະເຮົາຈະລ້ຽງເບິ່ງເຈົ້າໃຫ້ຢູ່ກັບເຮົາທີ່
ນະຄອນເຢຣູຊາເລັມ."
[34]ບາກຊີໄລໄດ້ທູນກະສັດວ່າ, "ຂ້ານ້ອຍຈະຢູ່ຕໍ່ໄປໄດ້ອີກຈັກປີ ທີ່ຂ້ານ້ອຍຈະຂຶ້ນໄປຢູ່ກັບກະສັດທີ່ນະຄອນເຢຣູຊາເລັມ?[35]ຂ້ານ້ອຍມີອາຍຸແປດ
ສິບປີແລ້ວ. ຂ້ານ້ອຍຈະສາມາດ ແຍກວ່າແມ່ນຫຍັງດີ ແມ່ນຫຍັງຊົ່ວໄດ້ບໍ່? ຜູ້ຮັບໃຊ້ຂອງທ່ານຈະຮູ້ລົດຊາດຂອງສິ່ງທີ່ກິນ ແລະດື່ມໄດ້ບໍ່? ຂ້າ
ນ້ອຍຈະຟັງສຽງນັກຮ້ອງຊາຍ ແລະຍິງຮ້ອງເພງໄດ້ອີກບໍ່? ເປັນຫຍັງຈະໃຫ້ຜູ້ຮັບໃຊ້ຂອງທ່ານ ເປັນພາລະເພີ່ມແກ່ກະສັດເຈົ້ານາຍຂອງຂ້າ
ນ້ອຍ?[36]ຜູ້ຮັບໃຊ້ຂອງທ່ານປະສົງຈະຕາມ ຂ້າມແມ່ນ້ຳຈໍແດນກັບກະສັດເທົ່ານັ້ນ. ສະນັ້ນກະສັດຈະຊົງຕອບແທນດ້ວຍລາງວັນເຊັ່ນນີ້?
[37]ຂໍໃຫ້ຜູ້ຮັບໃຊ້ຂອງທ່ານ ໄດ້ກັບໄປເພື່ອຈະຕາຍໃນເມືອງຂອງຂ້ານ້ອຍ, ໃກ້ທີ່ຝັງສົບພໍ່ແມ່ຂອງຂ້ານ້ອຍ. ແຕ່ຂໍຈົ່ງຊົງແນມເຫັນເຖີດ, ນີ້ຄືກິມ
ຮາມຜູ້ຮັບໃຊ້ຂອງພະອົງ. ຂໍໃຫ້ເຂົາຕາມກະສັດເຈົ້ານາຍຂອງຂ້ານ້ອຍໄປ, ຂໍຊົງເຮັດຕໍ່ເຂົາຕາມທີ່ຊົງເຫັນຄວນ."
[38]ກະສັດໄດ້ຕອບວ່າ, "ກິມຮາມຈະຂ້າມໄປກັບເຮົາ, ເຮົາຈະເຮັດຄຸນແກ່ເຂົາຕາມທີ່ເຈົ້າເຫັນຄວນ, ສິ່ງໃດກໍຕາມທີ່ເຈົ້າປາຖະໜາຈາກເຮົາ,
ເຮົາຍິນດີເຮັດໃຫ້ເຈົ້າ."[39]ແລ້ວປະຊາຊົນທັງຫມົດ ກໍໄດ້ຂ້າມແມ່ນ້ຳຈໍແດນ, ແລະກະສັດກໍໄດ້ຂ້າມໄປ ກະສັດໄດ້ຊົງຈູບບາກຊີໄລ, ແລະໄດ້ອວຍ
ພອນເຂົາ. ແລ້ວບາກຊີໄລກໍໄດ້ກັບໄປຍັງທີ່ຢູ່ຂອງເຂົາ.
[40]ດັ່ງນັ້ນກະສັດໄດ້ຂ້າມໄປຍັງກິນການ, ແລະກິມຮາມກໍໄດ້ຂ້າມຕາມເພິ່ນໄປ. ກອງທັບຂອງຢູດາຍທັງຫມົດ ກໍໄດ້ນຳກະສັດຂ້າມມາ, ແລະເຄິ່ງ
ຫນຶ່ງຂອງກອງທັບດ້ວຍ.[41]ໃນບໍ່ຊ້າອິດສະຣາເອນທັງຫມົດ ກໍໄດ້ເລີ່ມມາເຝົ້າກະສັດ ແລະໄດ້ທູນກະສັດວ່າ, "ພີ່ນ້ອງຂອງເຮົາຄົນຢູດາຍ ຈຶ່ງໄດ້
ລັກພາທ່ານໄປ, ແລະໄດ້ນຳກະສັດ ແລະຣາຊວົງຂອງເພິ່ນຂ້າມແມ່ນ້ຳຈໍແດນໄປ, ແລະພ້ອມກັບຄົນຂອງດາວິດທັງຫມົດ?"
[42]ດັ່ງນັ້ນ ຄົນຢູດາທັງປວງ ຈຶ່ງໄດ້ຕອບຄົນອິດສະຣາເອນວ່າ, "ເພາະວ່າກະສັດຊົງເປັນພີ່ນ້ອງກັບເຮົາ. ທ່ານທັງຫລາຍຈະຄຽດ ດ້ວຍເລື່ອງນີ້ເຮັດ
ຫຍັງ? ພວກເຮົາໄດ້ກິນສິ່ງໃດທີ່ກະສັດຕ້ອງຈ່າຍໃຫ້ຫລືບໍ່? ເພິ່ນໃຫ້ລາງວັນຫຍັງແກ່ເຮົາບໍ່?"[43]ຄົນອິດສະຣາເອນກໍໄດ້ຕອບຄົນຢູດາວ່າ, "ເຮົາມີ
ສິບເຜົ່າທີ່ມີຄວາມກ່ຽວຂ້ອງ ສຳພັນກັບກະສັດ, ດັ່ງນັ້ນເຮົາມີສິດທີ່ໃນດາວິດຫລາຍກວ່າພວກທ່ານ. ເປັນຫຍັງພວກທ່ານຈຶ່ງດູຖູກເຮົາເຊັ່ນນີ້? ບໍ່
ແມ່ນພວກເຮົາທີ່ເປັນພວກທຳອິດບໍ ທີ່ສະເຫນີໃຫ້ນຳກະສັດຂອງພວກເຮົາກັບມາ?" ແຕ່ຖ້ອຍຄຳຂອງຄົນ ຢູດາ ກໍຮຸນແຮງກວ່າຖ້ອຍຄຳຂອງຄົນ
ອິດສະຣາເອນ.

 generated on Tue Jun 17 19:01:42 2025

20 [1]ທີ່ດຽວກັນນັ້ນໄດ້ມີຄົນກໍ່ກວນຄົນໜຶ່ງຊື່ເຊບາ ລູກຊາຍຂອງບິກຣີ, ຄົນເບັນຢາມິນ. ເຂົາໄດ້ເປົ່າແກ ແລະ ໄດ້ກ່າວວ່າ,
"ພວກເຮົາບໍ່ມີສ່ວນໃນດາວິດ, ທັງກໍບໍ່ໄດ້ມີມໍຣະດົກໃນລູກຊາຍຂອງເຢຊີ. ອິດສະຣາເອນເອີຍ, ໃຫ້ທຸກຄົນກັບບ້ານຂອງຕົນເອງ."[2]ດັ່ງນັ້ນ
ຄົນອິດສະຣາເອນທັງປວງກໍໄດ້ໄປຈາກດາວິດ ແລະ ໄດ້ຕິດຕາມເຊບາລູກຊາຍຂອງບິກຣີ. ແຕ່ຄົນຢູດາຍຍັງໄດ້ຕິດຕາມກະສັດຂອງພວກເຂົາ
ຢ່າງໃກ້ຊິດ, ຈາກແມ່ນ້ຳຈໍແດນຕະຫລອດທາງໄປຮອດນະຄອນເຢຣູຊາເລັມ.

[3]ເມື່ອດາວິດໄດ້ກັບມາທີ່ຣາຊວັງທີ່ນະຄອນເຢຣູຊາເລັມ, ເພິ່ນໄດ້ນຳສາວໃຊ້ທັງສິບຄົນ ທີ່ເພິ່ນໄດ້ຊິງໄປໄວ້ໃຫ້ເຝົ້າຣາຊວັງນັ້ນ,
ແລະເອົາພວກເຂົາໄປໄວ້ໃນບ້ານຫລັງໜຶ່ງທີ່ມີຍາມເຝົ້າ, ເພິ່ນໄດ້ຊົງລ້ຽງດູພວກເຂົາໃນຄວາມຕ້ອງການຕ່າງໆຂອງພວກເຂົາ, ແຕ່ເພິ່ນບໍ່ໄດ້ຊົງ
ຫລັບນອນກັບພວກນາງອີກຕໍ່ໄປ. ດັ່ງນັ້ນພວກນາງຈຶ່ງໄດ້ຖືກກັກໄວ້, ໃຫ້ມີຊີວິດຢູ່ຢ່າງແມ່ຫມ້າຍຈົນເຖິງມື້ຕາຍ.
[4]ແລ້ວກະສັດໄດ້ກ່າວກັບອາມາສາວ່າ, "ຈົ່ງລະດົມຄົນຢູດາຍໃຫ້ພ້ອມພາຍໃນສາມວັນ; ຕົວທ່ານຈົ່ງມາທີ່ນີ້, ດ້ວຍເຊັ່ນກັນ."[5]ດັ່ງນັ້ນອາມາສາກໍ
ໄດ້ອອກໄປລະດົມຄົນຢູດາຍ, ແຕ່ເຂົາກໍໄດ້ເຮັດງານຊ້າເກີນເວລາທີ່ກະສັດໄດ້ກຳນົດໃຫ້ເຂົາເຮັດ.
[6]ດັ່ງນັ້ນດາວິດໄດ້ກ່າວກັບອາບີໄຊວ່າ, "ບັດນີ້ເຊບາ ລູກຊາຍຂອງບິກຣີຈະສ້າງຄວາມເດືອດຮ້ອນໃຫ້ເຮົາຫລາຍກວ່າອັບຊາໂລມໄດ້ເຮັດ. ທ່ານ
ຈົ່ງນຳບັນດາຜູ້ຮັບໃຊ້ຂອງເຈົ້ານາຍຂອງທ່ານ, ເຫລົ່າທະຫານຂອງເຮົາ, ແລະ ໄລ່ຕາມເຂົາໄປ, ຫລື ບໍ່ເຊັ່ນນັ້ນເຂົາຈະຫາບັນດາເມືອງທີ່ມີປ້ອມ
ປາການໄດ້ ແລະ ໜີພົ້ນສາຍຕາເຮົາ."[7]ແລ້ວພວກຄົນຂອງໂຢອາບໄດ້ອອກໄປໄລ່ຕາມເຂົາ, ພ້ອມກັບຄົນເກເຣັດ ກັບຄົນເປເລັດກັບນັກຮົບທັງ
ຫມົດ. ພວກເຂົາໄດ້ອອກຈາກນະຄອນເຢຣູຊາເລັມເພື່ອໄລ່ຕາມເຊບາ ບຸດຊາຍຂອງບິກຣີ.
[8]ເມື່ອພວກເຂົາໄດ້ມາເຖິງໂງ່ນຫີນໃຫຍ່ທີ່ຢູ່ໃນເມືອງກິເບໂອ, ອາມາສາ ກໍໄດ້ມາພົບພວກເຂົາ. ໂຢອາບໄດ້ສວມໃສ່ເຄື່ອງແຕ່ງກາຍທະຫານຢ່າງ
ທີ່ເຂົາໄດ້ເຄີຍໃສ່, ໂດຍມີດາບຢູ່ໃນຝັກຄັດແອວໄວ້. ເມື່ອເຂົາໄດ້ຍ່າງໄປ, ດາບກໍໄດ້ຫລຸດຕົກລົງ.
[9]ດັ່ງນັ້ນໂຢອາບຈຶ່ງໄດ້ຖາມອາສາມາວ່າ, "ພີ່ນ້ອງຂອງຂ້ອຍ, ສະບາຍດີບໍ່?" ໂຢອາບກໍເອົາມືຂວາຈັບຫນວດຂອງອາສາມາດ້ວຍຄວາມຮັກ ແລະ
ຈູບເຂົາ.[10]ອາມາສາບໍ່ໄດ້ສັງເກດດາບທີ່ຢູ່ໃນມືຊ້າຍຂອງໂຢອາບ. ໂຢອາບຈຶ່ງໄດ້ແທງທ້ອງອາມາສາຈົນໄສ້ໄຫລ່ລົງພື້ນດິນ. ໂຢອາບບໍ່ໄດ້ແທງເຂົາ
ອີກຄັ້ງ, ແລະ ອາມາສາກໍໄດ້ຕາຍ. ດັ່ງນັ້ນໂຢອາບ ແລະ ອາບີໄຊນ້ອງຊາຍຂອງເຂົາກໍໄດ້ໄລ່ຕາມເຊບາລູກຊາຍຂອງບິກຣີໄປ.
[11]ແລ້ວທະຫານຄົນຫນຶ່ງຂອງໂຢອາບໄດ້ຢືນຢູ່ໃກ້ອາມາສາ, ແລະ ໄດ້ເວົ້າວ່າ, "ໃຜເຫັນດ້ວຍກັບໂຢອາບ, ແລະ ໃຜຢູ່ຝ່າຍດາວິດ,ໃຫ້ຜູ້ນັ້ນຕິດ
ຕາມໂຢອາບໄປ."[12]ອາມາສາກໍນອນຈົມກອງເລືອດຂອງຕົນເອງຢູ່ທີ່ໃນຫົນທາງ. ເມື່ອຊາຍຄົນນັ້ນເຫັນພວກທະຫານທັງຫມົດໄດ້ຢືນຢູ່, ເຂົາກໍໄດ້
ຍ້າຍອາມາສາຈາກຫົນທາງໄປຖິ້ມໃນທົ່ງນາ ເຂົາໄດ້ໂຍນເສື້ອຜ້າປົດຮ່າງກາຍເຂົາໄວ້. ເພາະວ່າເຂົາໄດ້ເຫັນວ່າທຸກຄົນທີ່ຜ່ານມາກໍໄດ້ຢືນຢູ່.
[13]ຫລັງຈາກທີ່ສົບຂອງອາມາສາໄດ້ຖືກນຳອອກຈາກຫົນທາງແລ້ວ, ທະຫານທັງປວງກໍໄດ້ຕາມໂຢອາບເພື່ອໄລ່ຕາມເຊບາລູກຊາຍຂອງບິກຣີ.
[14]ເຊບາກໍໄດ້ຜ່ານເຂດແດນຕ່າງໆຂອງຄົນອິດສະຣາເອນທຸກເຜົ່າຈົນເຖິງອາເບັນ ແຫ່ງເບັດມາອາກາໄປຈົນເຖິງ, ແລະ ຜ່ານທະລຸໄປທຸກດິນແດນ
ຂອງຄົນບິກຣີທັງຫມົດ.[15]ທີ່ໄດ້ມາຮ່ວມກັນ ແລະ ໄດ້ໄລ່ຕິດຕາມເຊບາໄປ ພວກເຂົາກໍໄດ້ຕາມມາທັນເຂົາ ແລະ ໄດ້ລ້ອມເຂົາໄວ້ໃນເມືອງອາເບັນ
ແຂວງເບັດມາອາກາ. ພວກເຂົາໄດ້ກໍທາງເນີນຂຶ້ນບ່ອນກຳແພງ. ທະຫານທັງຫມົດທີ່ຢູ່ກັບໂຢອາບກໍຕຳກຳແພງເພື່ອໃຫ້ກຳແພງພັງລົງ.[16]ແລ້ວມີຜູ້
ຍິງສະຫລາດຄົນຫນຶ່ງໄດ້ຮ້ອງອອກມາຈາກໃນເມືອງວ່າ, "ຈົ່ງຟັງ, ຂໍຟັງແດ່, ໂຢອາບ! ເຂົ້າມາໃກ້ຂ້ານ້ອຍແດ່ ເພື່ອຂ້ານ້ອຍຈະເວົ້າກັບທ່ານ."
[17]ດັ່ງນັ້ນໂຢອາບກໍໄດ້ເຂົ້າມາໃກ້ນາງ, ແລະຜູ້ຍິງນັ້ນກໍໄດ້ເວົ້າວ່າ, "ທ່ານຄືໂຢອາບແມ່ນບໍ?" ເຂົາໄດ້ຕອບວ່າ, "ແມ່ນແລ້ວ."ເຮົາຄືໂຢອາບ," ນາງ
ຈຶ່ງໄດ້ກ່າວກັບເຂົາວ່າ, "ຂໍທ່ານຟັງຖ້ອຍຄຳຂອງສາວໃຊ້ຂອງທ່ານຈັກຫນ່ອຍ." ເຂົາກໍໄດ້ຕອບວ່າ, ເຮົາກຳລັງຟັງຢູ່ແລ້ວ."[18]ແລ້ວນາງກໍໄດ້ເວົ້າ
ວ່າ, "ສະໄຫມໂບຮານພວກເຂົາໄດ້ເວົ້າກັນວ່າ, "ໃຫ້ຂໍຄຳປຶກສາທີ່ອາເບັນໃຫ້ແນ່ນອນເທີດ" ແລະ ຄຳປຶກສານັ້ນຈະເຮັດໃຫ້ເລື່ອງນັ້ນຈົບລົງໄດ້.
[19]ພວກເຮົາເປັນເມືອງຫນຶ່ງທີ່ເຕັມດ້ວຍຄວາມງຽບສະງົບທີ່ສຸດ ແລະ ສັດຊື່ໃນອິດສະຣາເອນ. ທ່ານກຳລັງຈະທຳລາຍເມືອງ ອັນເປັນເມືອງແມ່
ຂອງອິດສະຣາເອນ. ເປັນຫຍັງທ່ານຈຶ່ງຕ້ອງການຈະມ້າງເພມໍຣະດົກຂອງພຣະຢາເວ?"
[20]ດັ່ງນັ້ນໂຢອາບຈຶ່ງໄດ້ຕອບວ່າ, "ຂໍໃຫ້ຫ່າງໄກ, ຂໍໃຫ້ຫ່າງໄກຈາກເຮົາ, ຊຶ່ງເຮົາຈະມ້າງເພຫລືທຳລາຍນັ້ນ.[21]ເລື່ອງນີ້ບໍ່ເປັນຄວາມຈິງ. ແຕ່ມີຜູ້
ຊາຍຄົນຫນຶ່ງຈາກເຂດເນີນພູເອຟຣາອິມ, ຊື່ເຊບາລູກຊາຍຂອງບິກຣີ, ໄດ້ຍົກມືຂອງເຂົາຂຶ້ນຕໍ່ສູ້ກະສັດ, ຕໍ່ສູ້ດາວິດ. ຈົ່ງມອບເຂົາມາຄົນດຽວ,
ແລະ ເຮົາຈະຖອນທັບຈາກເມືອງນີ້." ຜູ້ຍິງນັ້ນຈຶ່ງກ່າວກັບໂຢອາບວ່າ, "ຫົວຂອງເຂົາຈະຖືກໂຍນຂ້າມກຳແພງມາໃຫ້ທ່ານ."[22]ແລ້ວຜູ້ຍິງນັ້ນກໍໄປ
ຫາປະຊາຊົນທັງຫມົດດ້ວຍປັນຍາຂອງນາງ. ພວກເຂົາກໍໄດ້ຕັດຫົວຂອງເຊບາລູກຊາຍຂອງບິກຣີ, ແລະ ໄດ້ໂຍນໃຫ້ໂຢອາບ. ແລ້ວເຂົາກໍເປົ່າ
ແກ ແລະ ທະຫານຂອງໂຢອາບກໍໄດ້ແຍກໄປຈາກເມືອງ, ທຸກຄົນກໍໄດ້ກັບໄປຍັງທີ່ຢູ່ຂອງຕົນ.
ແລ້ວໂຢອາບກໍໄດ້ກັບຄືນເຢຣູຊາເລັມໄປຫາກະສັດ.
[23]ແລ້ວໂຢອາບກໍໄດ້ກັບໄປເຝົ້າກະສັດທີ່ນະຄອນເຢຣູຊາເລັມ, ແລະ ບັດນີ້ໂຢອາບໄດ້ເປັນຜູ້ບັງຄັບບັນຊາກອງທັບທັງຫມົດຂອງອິດສະຣາເອນ
ແລະ ເບນາອີຢາລູກຊາຍຂອງເຢໂຮຍອາດາໄດ້ເປັນຜູ້ບັງຄັບບັນຊາຂອງຄົນເກເຣັດ ແລະ ຄົນເປເລັດ.[24]ອາໂດນີຣາມໄດ້ດູແລບັນດາຄົນງານ
ທັງຫລາຍ, ແລະ ເຢໂຮຊາຟັດລູກຊາຍຂອງອາຮີລຸດໄດ້ເປັນຜູ້ດູແລກ່ຽວກັບແຮງງານ.[25]ເຊວາເປັນເລຂາທິການຂອງສານຊາດົກ ແລະ ອາບີອາ
ທາເປັນປະໂຣຫິດ.[26]ອີຣາຕະກູນຢາອີເປັນຫົວຫນ້າຂ້າຣາຊການຊັ້ນຜູ້ໃຫຍ່ຂອງດາວິດດ້ວຍ.

21 1ໄດ້ມີການອຶດຢາກອາຫານໃນສະໄຫມຂອງດາວິດຢູ່ເປັນເວລາສາມປີຕິດຕໍ່ກັນ, ແລະ ດາວິດກໍໄດ້ສະແຫວງຫາຫນ້າຂອງພຣະຢາເວ. ດັ່ງ
ນັ້ນພຣະຢາເວຈຶ່ງໄດ້ກ່າວວ່າ, "ການອຶດຢາກອາຫານທີ່ເກີດຂຶ້ນກັບພວກເຈົ້ານີ້ເປັນເພາະວ່າໂຊນ ແລະຄອບຄົວຂອງເຂົາ, ໄດ້ມີຄວາມຜິດ
ໃນການຂ້າຄົນ ພວກເຂົາໄດ້ຂ້າຄົນກິເບໂອນ."

2ບັດນີ້ຄົນກິເບໂອນນັ້ນບໍ່ແມ່ນເຊື້ອສາຍອິດສະຣາເອນ; ພວກເຂົາເປັນຄົນອາໂມຣິດທີ່ຍັງເຫລືອຢູ່. ປະຊາຊົນອິດສະຣາເອນໄດ້ສັນຍາຕໍ່ພວກເຂົາ
ວ່າຈະບໍ່ຂ້າພວກເຂົາ, ແຕ່ໂຊນກໍໄດ້ຊຶ່ງພະຍາຍາມທີ່ຈະສັງຫານພວກເຂົາທັງຫມົດ ເພາະຄວາມກະຕືລືລົ້ນເພື່ອເຊື້ອສາຍອິດສະຣາເອນ ແລະ
ຢູດາຍ. 3ດັ່ງນັ້ນ ກະສັດດາວິດໄດ້ຊຶ່ງຮ້ອງປະຊຸມພວກກິເບໂອນ ແລະ ໄດ້ຖາມພວກເຂົາວ່າ, "ເຮົາຄວນຈະເຮັດຫຍັງໃຫ້ແກ່ພວກທ່ານໄດ້? ເຮົາ
ຈະເຮັດຢ່າງໃດຈຶ່ງຈະແກ້ຄວາມຜິດທີ່ໄດ້ເຮັດຕໍ່ພວກເຈົ້າໄດ້, ເພື່ອພວກທ່ານຈະໄດ້ອວຍພອນແກ່ປະຊາຊົນຂອງພຣະຢາເວ, ຜູ້ໄດ້ຮັບມໍຣະດົກ
ຂອງຄວາມດີ ແລະ ຄຳສັນຍາຂອງພຣະອົງ?"
4ຄົນກິເບໂອໄດ້ທູນຕອບເພິ່ນວ່າ, "ມັນບໍ່ແມ່ນເລື່ອງເງິນ ຫລື ທອງລະຫວ່າງພວກຂ້ານ້ອຍທ່ານກັບໂຊນ ຫລື ເຊື້ອສາຍຂອງທ່ານ. ໃນທຳນອງ
ດຽວກັນ ມັນບໍ່ແມ່ນເລື່ອງຂອງພວກຂ້ານ້ອຍທີ່ຈະປະຫານຊີວິດໃຜໃນອິດສະຣາເອນ." ດາວິດຈຶ່ງໄດ້ກ່າວວ່າ, "ພວກທ່ານເວົ້າວ່າຢ່າງໃດ ທີ່ເຮົາ
ຄວນຈະເຮັດໃຫ້ພວກທ່ານ?"
5ພວກເຂົາໄດ້ຕອບກະສັດວ່າ, "ສຳລັບຜູ້ຊາຍຜູ້ທີ່ໄດ້ພະຍາຍາມຂ້າພວກຂ້ານ້ອຍ, ແລະ ຜູ້ທີ່ໄດ້ວາງແຜນທຳລາຍພວກຂ້ານ້ອຍ, ດັ່ງນັ້ນພວກ
ຂ້ານ້ອຍໄດ້ຖືກທຳລາຍ ແລະ ບໍ່ມີທີ່ຢູ່ໃນເຂດແດນຂອງອິດສະຣາເອນ - 6ຂໍໃຫ້ມອບເຈັດຄົນຈາກເຊື້ອສາຍຂອງເຂົາໃຫ້ພວກຂ້ານ້ອຍ, ແລະ
ພວກຂ້ານ້ອຍຈະໄດ້ແຂວນຄໍພວກເຂົາ ຕໍ່ຫນ້າພຣະຢາເວ ທີ່ກິເບອາບ້ານເກີດເມືອງນອນຂອງໂຊນ, ຜູ້ທີ່ໄດ້ຮັບການເລືອກຂອງພຣະຢາເວ." ດັ່ງ
ນັ້ນກະສັດໄດ້ກ່າວວ່າ, "ເຮົາຈະມອບພວກເຂົາໃຫ້ແກ່ເຈົ້າ."
7ແຕ່ກະສັດໄດ້ຊຶ່ງໄວ້ຊີວິດເມຟີໂບເຊັດລູກຊາຍຂອງໂຢນາທານ ແລະ ຫລານຊາຍຂອງໂຊນ, ເພາະຄຳສັນຍາຂອງພຣະຢາເວທີ່ທັງສອງໄດ້ເຮັດ,
ຄືລະຫວ່າງດາວິດ ກັບໂຢນາທານລູກຊາຍຂອງໂຊນ. 8ແຕ່ກະສັດໄດ້ນຳເອົາລູກຊາຍສອງຄົນຂອງນາງຣິຊະປາລູກສາວຂອງອາອີຢາ, ລູກຊາຍທັງ
ສອງຄົນຂອງນາງທີ່ໄດ້ເກີດກັບໂຊນ - ຊື່ຂອງລູກຊາຍທັງສອງຄົນຄື ອາກໂມນີ ແລະ ເມຟີໂບເຊັດ; ແລະ ດາວິດກໍໄດ້ນຳລູກຊາຍທັງຫ້າຄົນຂອງ
ເມຣາບລູກສາວຂອງໂຊນ, ຊຶ່ງພວກນາງໄດ້ມີກັບອັດຣີເອນ ລູກຊາຍຂອງບາກຊິນໄລຊາວເມືອງເມໂຮລາ. 9ເພິ່ນໄດ້ຊຶ່ງມອບຄົນເຫລົ່ານີ້ໄວ້ໃນມື
ຂອງຄົນກິເບໂອນ. ພວກເຂົາຈຶ່ງໄດ້ແຂວນຄໍພວກເຂົາເທິງພູເຂົາຕໍ່ຫນ້າພຣະຢາເວ, ແລະ ພວກເຂົາທັງເຈັດຄົນກໍໄດ້ຕາຍໄປດ້ວຍກັນ. ພວກເຂົາ
ຖືກຂ້າຕາຍໃນຊ່ວງລະດູກ່ຽວເຂົ້າ, ລະຫວ່າງມື້ທຳອິດຂອງມື້ເລີ່ມຕົ້ນກ່ຽວເຂົ້າບາເລ.
10ແລ້ວນາງຣິຊະປາ, ລູກສາວຂອງອາອີຢາ,ກໍໄດ້ເອົາຜ້າກະສອບປູໄວ້ເທິງກ້ອນຫີນສຳລັບຕົນເອງເທິງພູເຂົາຂ້າງໆ ຮ່າງກາຍທັງຫລາຍຂອງຄົນ
ຕາຍ, ຕັ້ງແຕ່ຕົ້ນລະດູກ່ຽວຈົນເຖິງເວລາທີ່ຝົນຈາກທ້ອງຟ້າຕົກຈາກທ້ອງຟ້າຕົກລົງພວກເຂົາ. ນາງບໍ່ຍອມໃຫ້ເຫລົ່າຝູງນົກແຫ່ງທ້ອງຟ້າມາລົບ
ກວນຮ່າງທັງຫລາຍໃນເວລາກາງເວັນ ຫລື ບໍ່ໃຫ້ສັດປ່າມາລົບກວນໃນເວລາກາງຄືນ. 11ເມື່ອເຂົາໄດ້ທູນດາວິດ, ໃຫ້ຊຶ່ງຮູ້ໃນສິ່ງທີ່ນາງຣິຊະປາ,
ລູກສາວຂອງອາອີຢາເມຍນ້ອຍຂອງໂຊນ, ໄດ້ເຮັດແລ້ວ.
12ດັ່ງນັ້ນດາວິດກໍໄດ້ໄປນຳກະສັດໂຊນ ແລະກະສັດໂຢນາທານລູກຊາຍເພິ່ນມາຈາກພວກຄົນຂອງເມືອງຢາເບັດກິເລອາດ, ຜູ້ທີ່ໄດ້ລັກລອບເອົາໄປ
ຈາກເມືອງເບັດຊານ, ທີ່ພວກຟີລິດສະຕິນແຂວນທັງສອງທ່ານໄວ້, ຫລັງຈາກທີ່ພວກຟີລິດສະຕິນປະຫານໂຊນໃນກິນໂບອາ. 13ດາວິດໄດ້ຊຶ່ງນຳກະ
ສັດໂຊນ ແລະກະສັດໂຢນາທານລູກຊາຍຂອງເພິ່ນຂຶ້ນມາຈາກທີ່ນັ້ນ ແລະພວກເຂົາໄດ້ລວບລວມກະດູກຂອງຄົນທັງເຈັດຄົນທີ່ຖືກແຂວນຄໍຕາຍ
ດ້ວຍເຊັ່ນກັນ ພວກເຂົາກໍໄດ້ຝັງກະສັດຂອງໂຊນ, ແລະຂອງໂຢນາທານລູກຊາຍຂອງເພິ່ນໄວ້ໃນແຜ່ນດິນຂອງເບັນຢາມິນໃນເມືອງເຊລາ, ໃນອຸບ
ມຸງຂອງກີເຊພໍ່ຂອງກະສັດໂຊນ.
14ພວກເຂົາໄດ້ຝັງກະດູກຂອງໂຊນ ແລະ ໂຢນາທານລູກຊາຍຂອງເຂົາໃນປະເທດເບັນຢາມິນໃນເມືອງເຊລາ, ໃນອຸບມຸງຂອງີກີເຊພໍ່ຂອງເຂົາ.
ພວກເຂົາກໍໄດ້ເຮັດຕາມທຸກຢ່າງທີ່ກະສັດໄດ້ຊຶ່ງບັນຊາໄວ້. ຫລັງຈາກນັ້ນພຣະເຈົ້າກໍໄດ້ຊຶ່ງຕອບຄຳອະທິຖານຂອງພວກເຂົາເພື່ອແຜ່ນດິນນັ້ນ.
15ແລ້ວພວກຟີລິດສະຕິນໄດ້ລົງມາເຮັດສົງຄາມກັບຄົນອິດສະຣາເອນອີກຄັ້ງ. ດັ່ງນັ້ນດາວິດກໍໄດ້ລົງໄປພ້ອມກັບກອງທັບຂອງເພິ່ນ ແລະ ໄດ້ຊຶ່ງສູ້
ຮົບກັບຄົນຟີລິດສະຕິນ. ດາວິດກໍຊຶ່ງໄດ້ຮັບໄຊຊະນະດ້ວຍການເມື່ອຍລ້າຈາກສົງຄາມ. 16ອີສະບີເບໂນບ, ຄົນຫນຶ່ງໃນເຊື້ອສາຍຍັກ, ຜູ້ທີ່ຫອກ
ເປັນທອງສຳຣິດຫນັກປະມານສາມກິໂລ, ແລະ ເປັນຜູ້ທີ່ມີດາບໃຫມ່ຄາດແອວ, ໄດ້ຄິດຈະຂ້າດາວິດ. 17ແຕ່ອາບີໄຊລູກຊາຍຂອງນາງເຊຣູອີຢາ
ໄດ້ເຂົ້າມາຊ່ວຍດາວິດໄວ້, ແລະ ສູ້ຮົບກັບຄົນຟີລິດສະຕິນ, ແລະ ໄດ້ຂ້າເຂົາ. ແລ້ວເຫລົ່າທະຫານຂອງດາວິດກໍໄດ້ສັນຍາຕໍ່ຫນ້າເພິ່ນວ່າ, "ຂໍ
ທ່ານຢ່າໄປເຮັດສຶກພ້ອມກັບພວກຂ້ານ້ອຍອີກຕໍ່ໄປເລີຍ, ເພື່ອພວກຂ້ານ້ອຍຈະບໍ່ສູນເສຍທ່ານໄປ."
18ເລື່ອງນີ້ໄດ້ເກີດຂຶ້ນພາຍຫລັງທີ່ມີການຮົບກັບພວກຟີລິດສະຕິນອີກທີ່ເມືອງໂກບ, ຄາວນັ້ນສິບເບກາຍຊາວເມືອງຮູຊາໄດ້ຂ້າຄົນຮ່າງໃຫຍ່ຜູ້ຫນຶ່ງ
ຊື່ວ່າສາເຟ, ຜູ້ຊຶ່ງເປັນລູກຫລານຂອງເຣຟາອິມ. 19ເລື່ອງນີ້ໄດ້ເກີດຂຶ້ນອີກຄັ້ງໃນການຮົບກັບພວກຟີລິດສະຕິນທີ່ເມືອງໂກບອີກ, ທີ່ເອນຮານານລູກ
ຊາຍຂອງຢາອີ ຊາວເບັດເລເຮັມ, ໄດ້ຂ້າໂກລີອາດຊາວກາດ, ຜູ້ມີຫອກເທົ່າກັບໄມ້ກຳພັນຫູກ.
20ເລື່ອງນີ້ກໍໄດ້ເກີດຂຶ້ນມີການຮົບກັນອີກທີ່ເມືອງກາດ ອັນເປັນເມືອງທີ່ມີຊາຍຄົນຫນຶ່ງຮູບຮ່າງໃຫຍ່ ຜູ້ທີ່ມີນິ້ວມືຂ້າງລະຫົກນິ້ວ ແລະ ນິ້ວຕີນຂ້າງ
ລະຫົກນິ້ວ ລວມກັນຊາວສີ່ນິ້ວ. ເຂົາກໍໄດ້ສືບເຊື້ອສາຍມາຈາກພວກເອຟາອິມດ້ວຍ. 21ເມື່ອເຂົາທ້າທ້າຍອິດສະຣາເອນ, ໂຢນາທານລູກຊາຍຂອງ
ຊາມມາ, ແລະຫລານຊາຍຂອງດາວິດກໍໄດ້ຂ້າເຂົາ. 22ຄົນເຫລົ່ານີ້ສືບເຊື້ອສາຍຄົນເອຟາອິມຂອງເມືອງກາດ, ແລະ ພວກເຂົາໄດ້ຖືກຂ້າຕາຍ
ດ້ວຍມືຂອງດາວິດ ແລະດ້ວຍມືຂອງເຫລົ່າທະຫານຂອງເພິ່ນ.

 generated on Tue Jun 17 19:01:42 2025

22 1ດາວິດໄດ້ຊົງຮ້ອງບົດເພງນີ້ແກ່ພຣະຢາເວ ໃນວັນທີພຣະເຢເວຊົງຊ່ວຍກູ້ເພິ່ນໃຫ້ພົ້ນຈາກມືເຫລົ່າສັດຕູທັງຫມົດຂອງເພິ່ນ, ແລະຈາກ
ເງື້ອມມືຂອງໂຊນ. 2ເພິ່ນໄດ້ຊົງອະທິຖານວ່າ, "ພຣະຢາເວຊົງເປັນຜູ້ຄຸ້ມຄອງຂອງຂ້ານ້ອຍ ເປັນປ້ອມປາການຂອງຂ້ານ້ອຍ, ແລະເປັນຜູ້
ຊ່ວຍກູ້ຂອງຂ້ານ້ອຍ.

3ພຣະເຈົ້າຊົງເປັນຜູ້ຄຸ້ມຄອງຂອງຂ້ານ້ອຍ. ຂ້ານ້ອຍເຂົ້າລີ້ໄພຢູ່ໃນພຣະອົງ, ພຣະອົງຊົງເປັນໂລ້ຂອງຂ້ານ້ອຍ, ຊົງເປັນພະລັງແຫ່ງຄວາມລອດ
ຂອງຂ້ານ້ອຍ, ຊົງເປັນທີ່ກຳບັງອັນແຂງແກ່ງຂອງຂ້ານ້ອຍໃຫ້ລອດຈາກຄວາມຮຸນແຮງ. 4ຂ້ານ້ອຍຮ້ອງທູນພຣະຢາເວ, ຜູ້ຊົງສົມຄວນແກ່ການສັນ
ລະເສີນ, ແລະ ຂ້ານ້ອຍໄດ້ຮັບການຊົງຊ່ວຍໃຫ້ພົ້ນຈາກບັນດາສັດຕູຂອງຂ້ານ້ອຍ.
5ເພາະເຫລົ່າຄື້ນແຫ່ງຄວາມຕາຍໄດ້ລ້ອມຮອບຂ້ານ້ອຍ, ກະແສແຫ່ງຄວາມທຳລາຍກໍໄດ້ໄຫລຖ້ວມເຫນືອຂ້ານ້ອຍ. 6ສາຍໃຍຂອງແດນຄົນຕາຍ
ພັນຕົວຂ້ານ້ອຍ; ບ່ວງແຫ່ງຄວາມຕາຍໄດ້ພັນຮອບຂ້ານ້ອຍຢູ່.
7ໃນຄວາມທຸກລຳບາກຂອງຂ້ານ້ອຍ ຂ້ານ້ອຍໄດ້ຮ້ອງທູນພຣະຢາເວ; ຂ້ານ້ອຍໄດ້ຮ້ອງທູນພຣະເຈົ້າຂອງຂ້ານ້ອຍ; ພຣະອົງຊົງໄດ້ຍິນສຽງຂອງ
ຂ້ານ້ອຍຈາກພຣະວິຫານຂອງພຣະອົງ, ແລະສຽງຮ້ອງທູນຂໍຄວາມຊ່ວຍເຫລືອຂອງຂ້ານ້ອຍໄດ້ໄປເຖິງພຣະວິຫານຂອງພຣະອົງ.
8ແລ້ວແຜ່ນດິນກໍໄດ້ສັ່ນສະເທືອນ ແລະໄດ້ຫວັ່ນໄຫວ ຮາກຖານຂອງຟ້າກໍໄດ້ຫວັ່ນໄຫວ ແລະໄດ້ສັ່ນສະເທືອນ, ເພາະພຣະເຈົ້າຊົງພຣະພິໂຣດ.
9ຄວັນໄຟກໍໄດ້ຂຶ້ນໄປຕາມຊ່ອງຮູດັງຂອງພຣະອົງ, ແລະ ຖ່ານໄຟກໍໄດ້ອອກມາຈາກປາກຂອງພຣະອົງ. ຖ່ານເຫລົ່ານັ້ນກໍຕິດເປວໄຟ.
10ພຣະອົງໄດ້ຊົງເປີດທ້ອງຟ້າ, ແລະໄດ້ລົງມາ ແລະຄວາມມືດກໍໄດ້ຢູ່ໃຕ້ຕີນຂອງພຣະອົງ. 11ພຣະອົງໄດ້ຊົງຂີ່ຫລັງເຄຣຸບຕົນຫນຶ່ງ ແລະຊົງບິນໄປ.
ພຣະອົງໄດ້ຊົງປະກົດເທິງປີກຂອງລົມ. 12ພຣະອົງໄດ້ຊົງເຮັດໃຫ້ຄວາມມືດປົກຄຸມຢູ່ຮອບພຣະອົງ, ລວມເຫລົ່າເມກຝົນຫນາທຶບໃນທ້ອງຟ້າທັງ
ປວງ.
13ຈາກຄວາມສະຫວ່າງຕໍ່ຫນ້າພຣະອົງຖ່ານໄຟໄດ້ຕົກລົງມາ. 14ພຣະຢາເວໄດ້ຊົງສົ່ງສຽງດັງຮ້າຍຟ້າຮ້ອງຈາກທ້ອງຟ້າ. ອົງຜູ້ສູງສຸດກໍໄດ້ຊົງຮ້ອງ
ສຽງອັນສຸດຣິດ. 15ພຣະອົງໄດ້ຊົງຍິງລູກທະນູ ແລະ ໄດ້ຊົງເຮັດໃຫ້ພວກສັດຕູກະຈາຍ ຊົງເຮັດໃຫ້ເກີດຟ້າແມບເຫລື້ອມ ແລະ ໄດ້ຊົງເຮັດໃຫ້
ພວກເຂົາແຕກຫນີໄປ.
16ແລ້ວຊ່ອງທາງນ້ຳກໍໄດ້ປາກົດຂຶ້ນ; ຮາກຖານໂລກກໍໄດ້ຖືກເປີດເຜີຍໄວ້ເວລາທີ່ພຣະເຈົ້າຢາເວຮ້ອງນາບຂູ່ເຫລົ່າສັດຕູ,
ທີ່ລົມຫາຍໃຈອອກຈາກດັງຂອງພຣະອົງ.
17ພຣະອົງໄດ້ຊົງເດ່ມືລົງມາຈາກເທິງຟ້າ; ຊົງຈັບຂ້ານ້ອຍ! ພຣະອົງໄດ້ຊົງດຶງຂ້ານ້ອຍອອກມາຈາກນ້ຳທີ່ຊັດໄປມາ. 18ພຣະອົງໄດ້ຊົງຊ່ວຍກູ້ຂ້າ
ນ້ອຍຈາກສັດຕູເຂັ້ມແຂງ, ຈາກບັນດາຜູ້ທີ່ຊັງຂ້ານ້ອຍ, ເພາະພວກເຂົາແຂງແຮງກວ່າຂ້ານ້ອຍຫລາຍ.
19ພວກເຂົາໄດ້ມາຕໍ່ສູ້ກັບຂ້ານ້ອຍໃນມື້ທີ່ຂ້ານ້ອຍໄດ້ປະສົບໄພພິບັດ, ແຕ່ພຣະຢາເວໄດ້ຊົງເປັນທີ່ເພິ່ງພາຂອງຂ້ານ້ອຍ. 20ພຣະອົງໄດ້ຊົງນຳຂ້າ
ນ້ອຍອອກມາຍັງທີ່ກວ້າງໃຫຍ່. ພຣະອົງໄດ້ຊົງຊ່ວຍກູ້ຂ້ານ້ອຍໄວ້ເພາະພຣະອົງໄດ້ຊົງພໍໃຈຂ້ານ້ອຍ. 21ພຣະຢາເວໄດ້ມອບລາງວັນແກ່ຂ້ານ້ອຍ
ຕາມຄວາມເປັນທຳຂອງຂ້ານ້ອຍ; ພຣະອົງໄດ້ຊົງຊ່ວຍຟື້ນຟູຂ້ານ້ອຍຕາມຄວາມສະອາດຂອງມືທັງສອງຂອງຂ້ານ້ອຍ.
22ເພາະຂ້ານ້ອຍໄດ້ຮັກສາທາງຂອງພຣະຢາເວ ແລ ະບໍ່ໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍໂດຍການຫັນຈາກພຣະເຈົ້າຂອງຂ້ານ້ອຍ. 23ເພາະກົດຫມາຍ
ແຫ່ງຄວາມເປັນທຳທັງຫມົດຂອງພຣະອົງຢູ່ຕໍ່ຫນ້າຂ້ານ້ອຍ, ຂ້ານ້ອຍບໍ່ໄດ້ຫັນໄປຈາກສິ່ງເຫລົ່ານັ້ນ.
24ຂ້ານ້ອຍໄດ້ບໍ່ມີຕຳຫນິຕໍ່ພຣະອົງ, ແລະ ຂ້ານ້ອຍໄດ້ຮັກສາຕົວໄວ້ຈາກຄວາມບາບ. 25ເພາະສະນັ້ນ ພຣະຢາເວໄດ້ຊົງຕອບແທນຂ້ານ້ອຍຕາມ
ຄວາມເປັນທຳຂ້ານ້ອຍ, ຕາມອັດຕາຄວາມສະອາດຂອງຂ້ານ້ອຍໃນສາຍຕາຂອງພຣະອົງ.
26ຕໍ່ຜູ້ທີ່ສັດຊື່, ທ່ານໄດ້ສຳແດງທ່ານເອງວ່າສັດຊື່; ຕໍ່ຜູ້ບໍ່ມີຕຳຫນິ, ທ່ານໄດ້ສຳແດງທ່ານເອງວ່າບໍ່ມີຕຳຫນິ. 27ຕໍ່ຜູ້ທີ່ບໍຣິສຸດ, ທ່ານໄດ້ສຳ
ແດງທ່ານເອງວ່າວ່າບໍຣິສຸດ, ແຕ່ທ່ານຊົງເປັນສັດຕູຕໍ່ຜູ້ທີ່ໄດ້ຄົດໂກງ.
28ພຣະອົງໄດ້ຊົງຊ່ວຍປະຊາຊົນທີ່ທຸກຍາກລຳບາກໃຫ້ລອດ, ແຕ່ສາຍຕາຂອງພຣະອົງທ່ານຕໍ່ສູ້ກັບດວງຕາທີ່ຍິ່ງຈອງຫອງ, ແລະ ພຣະອົງຊົງເຮັດ
ໃຫ້ຄົນເຫລົ່ານັ້ນຕ່ຳລົງ. 29ຂ້າແຕ່ພຣະຢາເວ, ພຣະອົງຊົງເປັນແສງແຈ້ງຂອງຂ້ານ້ອຍ, ພຣະຢາເວຊົງເຮັດໃຫ້ເກີດຄວາມສະຫວ່າງໃນຄວາມມືດ
ຂອງຂ້ານ້ອຍ.
30ເພາະໂດຍພຣະອົງ ຂ້ານ້ອຍສາມາດຜ່ານສິ່ງກີດຂວາງໄດ້; ໂດຍພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍສາມາດໂດດຂ້າມກຳແພງໄດ້. 31ສຳລັບພຣະ
ເຈົ້າ, ທາງຂອງພຣະອົງຄືຄວາມສົມບູນແບບ. ຖ້ອຍຄຳຂອງພຣະຢາເວແມ່ນບໍ່ມີຕຳຫນິ. ພຣະອົງຊົງເປັນໂລ່ກຳບັງຂອງທຸກຄົນທີ່ລີ້ໄພຢູ່ໃນພຣະ
ອົງ.
32ເພາະຜູ້ໃດຈະເປັນພຣະເຈົ້າອີກ ນອກຈາກພຣະຢາເວ, ແລະຜູ້ໃດເປັນຜູ້ປົກປ້ອງເວັ້ນແຕ່ພຣະເຈົ້າຂອງເຮົາ? 33ພຣະເຈົ້າຜູ້ຊົງເປັນທີ່ລີ້ໄພຂອງ
ຂ້ານ້ອຍ, ແລະ ພຣະອົງຊົງນຳຂ້ານ້ອຍໂດຍບໍ່ມີຕຳຫນິໃນທາງຂອງພຣະອົງ.
34ພຣະອົງຊົງເຮັດໃຫ້ຕີນຂອງຂ້ານ້ອຍເປັນຄືຢ່າງຕີນກວາງໂຕເມຍ ແລະຊົງວາງຂ້ານ້ອຍໄວ້ເທິງພູເຂົາທີ່ສູງ. 35ພຣະອົງຊົງຝຶກມືຂ້ານ້ອຍໃຫ້ເຮັດ
ສົງຄາມ, ແຂນຂ້ານ້ອຍພຣະອົງໃຫ້ໂກ່ງຄັນທະນູທອງ.
36ພຣະອົງໄດ້ປະທານໂລ່ແຫ່ງຄວາມລອດຂອງພຣະອົງແກ່ຂ້ານ້ອຍ, ແລະ ຄວາມພໍໃຈຂອງພຣະອົງກໍເຮັດໃຫ້ຂ້ານ້ອຍເປັນໃຫຍ່ຂຶ້ນ. 37ພຣະອົງ
ໄດ້ປະທານສະຖານທີ່ກວ້າງຂວາງສຳລັບຕີນຂອງຂ້ານ້ອຍໄດ້ເດີນໄປ, ດັ່ງນັ້ນຕີນຂອງຂ້ານ້ອຍຈຶ່ງບໍ່ພາດລົ້ມລົງຈັກເທື່ອ.
38ຂ້ານ້ອຍໄດ້ໄລ່ຕາມພວກສັດຕູຂອງຂ້ານ້ອຍ ແລະໄດ້ທຳລາຍພວກເຂົາ. ຂ້ານ້ອຍບໍ່ໄດ້ຫັນກັບຈົນກວ່າ ພວກເຂົາໄດ້ຖືກທຳລາຍຈົນຫມົດ. 39ຂ້າ
ນ້ອຍທຳລາຍພວກເຂົາ ແລະໄດ້ແທງພວກເຂົາທະລຸ; ພວກເຂົາຈຶ່ງບໍ່ສາມາດລຸກຂຶ້ນອີກ. ພວກເຂົາໄດ້ລົ້ມລົງໃຕ້ຕີນຂອງຂ້ານ້ອຍ.
40ພຣະອົງໄດ້ປະທານກຳລັງແກ່ຂ້ານ້ອຍຄືສາຍແອວເພື່ອສູ້ໃນສົງຄາມ; ພຣະອົງຊົງເຮັດໃຫ້ບັນດາຜູ້ທີ່ລຸກຂຶ້ນສູ້ຂ້ານ້ອຍຢຸດລົງ.
41ພຣະອົງຊົງເຮັດໃຫ້ເຫລົ່າສັດຕູຫນີໄປ; ບັນດາຜູ້ທີ່ຊັງຂ້ານ້ອຍ ຂ້ານ້ອຍກໍທຳລາຍທັງຫມົດ.
42ພວກເຂົາໄດ້ຮ້ອງຫາຄວາມຊ່ວຍເຫລືອ, ແຕ່ບໍ່ມີໃຜຊ່ວຍພວກເຂົາໄດ້; ພວກເຂົາໄດ້ເຂົ້າຮ້ອງທູນພຣະຢາເວ, ແຕ່ພຣະອົງບໍ່ໄດ້ຊົງຕອບພວກ
ເຂົາ. 43ຂ້ານ້ອຍຈຶ່ງໄດ້ທຸບເຂົາແຫລກລະອຽດເປັນຄືຝຸ່ນດິນ, ຂ້ານ້ອຍໄດ້ຫຍ້ຳພວກເຂົາຄືຂີ້ຕົມຕາມຫົນທາງ.
44ພຣະອົງຊົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກການຜິດຖຽງກັນກັບປະຊາຊົນຂອງຂ້ານ້ອຍ. ພຣະອົງຊົງຮັກສາຂ້ານ້ອຍໄວ້ໃຫ້ເປັນຫົວຫນ້າຂອງບັນດາ
ປະຊາຊົນ. ປະຊາຊົນທີ່ຂ້ານ້ອຍບໍ່ໄດ້ຮູ້ຈັກກໍຈະຮັບໃຊ້ຂ້ານ້ອຍ. 45ພວກຄົນຕ່າງດ້າວຈະຖືກບັງຄັບໃຫ້ກົ້ມກາບຕໍ່ຂ້ານ້ອຍ. ພໍພວກເຂົາໄດ້ຍິນເຖິງ
ຂ້ານ້ອຍ ພວກເຂົາກໍຈະເຊື່ອຟັງຂ້ານ້ອຍ. 46ພວກຄົນຕ່າງດ້າວກໍໄດ້ເສຍຂວັນຕົວສັ່ນອອກມາຈາກທີ່ກຳບັງແຂງແກ່ງຂອງເຂົາ.

[47]ພຣະຢາເວຊົງມີຊີວິດຢູ່! ຂໍໃຫ້ຫີນຂອງຂ້ານ້ອຍເປັນທີ່ຄວນສັນລະເສີນ. ຂໍໃຫ້ພຣະເຈົ້າໄດ້ຮັບການຍ້ອງຍໍ, ຫີນແຫ່ງຄວາມລອດຂອງຂ້າ
ນ້ອຍ.[48]ນີ້ຄືພຣະເຈົ້າຜູ້ຊົງແກ້ແຄ້ນໃຫ້ຂ້ານ້ອຍ, ພຣະອົງເປັນຜູ້ທີ່ນຳຊົນຊາດທັງຫລາຍລົງໃຫ້ຢູ່ໃຕ້ຂ້ານ້ອຍ.[49]ຜູ້ຊົງນຳຂ້ານ້ອຍອອກມາຈາກບັນ
ດາສັດຕູຂອງຂ້ານ້ອຍ. ແທ້ທີ່ຈິງ, ພຣະອົງຊົງຍົກຂ້ານ້ອຍຈາກຄົນທີ່ຕໍ່ສູ້ຂ້ານ້ອຍ. ພຣະອົງໄດ້ຊ່ວຍຂ້ານ້ອຍຈາກຜູ້ທີ່ໂຫດຮ້າຍ.
[50]ເພາະສະນັ້ນ, ຂ້າແດ່ພຣະຢາເວ, ຂ້ານ້ອຍຈຶ່ງຂອບພຣະຄຸນພຣະອົງທ່າມກາງບັນດາປະຊາຊົນ; ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະນາມ
ຂອງພຣະອົງ.[51]ພຣະເຈົ້າປະທານໄຊຊະນະຍິ່ງໃຫຍ່ແກ່ກະສັດຂອງພຣະອົງ, ແລະພຣະອົງໄດ້ຊົງອວຍພອນ, ແກ່ດາວິດ ແລະ ບັນດາລູກຫລານ
ຂອງເພິ່ນເປັນນິລັນ."


generated on Tue Jun 17 19:01:42 2025

23 1ບັດນີ້ ນີ້ເປັນຖ້ອຍຄຳສຸດທ້າຍຂອງດາວິດ-ດາວິດລູກຊາຍຂອງເຢຊີ, ຜູ້ຊາຍທີ່ໄດ້ຮັບກຽດຢ່າງສູງ, ຜູ້ຮັບການອວຍພອນໂດຍພຣະເຈົ້າ
ຂອງຢາໂຄບ, ນັກແຕ່ງບົດເພງອັນອອນຊອນຂອງອິດສະຣາເອນ. ໄດ້ກ່າວວ່າ, 2"ພຣະວິນຍານຂອງພຣະຢາເວໄດ້ກ່າວຜ່ານຂ້ານ້ອຍ, ແລະ
ສັ່ງຂອງພຣະອົງຢູ່ທີ່ລີ້ນຂອງຂ້ານ້ອຍ.

3ພຣະເຈົ້າແຫ່ງອິດສະຣາເອນຊົງໄດ້ກ່າວ ກັບຂ້ານ້ອຍ ຜູ້ຄຸມຊາດອິດສະຣາເອນໄດ້ກ່າວດັ່ງນີ້ວ່າ, 'ເມື່ອຜູ້ຫນຶ່ງປົກຄອງມະນຸດໂດຍຍຸດຕິທຳ, ຜູ້
ປົກຄອງດ້ວຍຄວາມຢຳເກງພຣະເຈົ້າ. 4ເຂົາຈະເປັນຄືແສງເມື່ອດວງຕາເວັນຂຶ້ນ, ໃນເວລາມື້ເຊົ້າທີ່ບໍ່ມີເມກ, ເມື່ອຫຍ້າອ່ອນງອກອອກຈາກດິນ
ເມື່ອມີແສງຈ້າຂອງດວງຕາເວັນພາຍຫລັງຝົນ.
5ເຊື້ອສາຍຂອງຂ້ານ້ອຍ,ບໍ່ເປັນເຊັ່ນນັ້ນຕໍ່ຫນ້າຂອງພຣະເຈົ້າບໍ່? ເພາະພຣະອົງບໍ່ໄດ້ຊົງເຮັດພັນທະສັນຍານິລັນກັບຂ້ານ້ອຍ, ອັນເປັນລະບຽບທຸກ
ຢ່າງ ແລະຫມັ້ນຄົງຢ່າງນັ້ນບໍ່? ພຣະອົງຈະບໍ່ຊົງໃຫ້ຄວາມລອດທຸກດ້ານ ແລະຄວາມປາຖະນາທຸກຢ່າງຂອງຂ້ານ້ອຍໃນທຸກໆສະພາບການບໍ່?
6ແຕ່ຄົນບໍ່ນັບຖືພຣະເຈົ້າທັງຫມົດກໍຄືຫນາມທີ່ຖືກຖອນຖິ້ມໄປ, ເພາະວ່າພວກເຂົາບໍ່ສາມາດຈະເອົາມືຢິບດ້ວຍມືຂອງໃຜໄດ້. 7ຄົນທີ່ແຕະຕ້ອງ
ພວກມັນ ຈະຕ້ອງຖືອາວຸດທີ່ເຮັດດ້ວຍເຫລັກຫລືດ້າມຂອງຫອກ. ພວກມັນຈະຕ້ອງຖືກເຜົາໃຫ້ທັງຫມົດໄວ້ທີ່ນັ້ນ."
8ຕໍ່ໄປນີ້ເປັນລາຍຊື່ຂອງນັກຮົບຜູ້ເກັ່ງກ້າຂອງດາວິດ ຄື: ໂຢເຊບບັດເຊເບັດ ຊາວຕາເກໂມ ເປັນຜູ້ນຳຂອງເຫລົ່ານັກຮົບຜູ້ເກັ່ງກ້າ. ເຂົາໄດ້ຂ້າຄົນ
ແປດຮ້ອຍຄົນໃນຄັ້ງດຽວ.
9ຄົນທີ່ຮອງລົງມາຄື: ເອເລອາຊາລູກຊາຍຂອງໂດໂດ, ຜູ້ເປັນລູກຊາຍຂອງອາໂຮອານ ຜູ້ທີ່ເປັນຫນຶ່ງໃນສາມຂອງນັກຮົບຜູ້ເກັ່ງກ້າຂອງດາວິດ.
ເຂົາໄດ້ຢູ່ເມື່ອພວກເຂົາເວົ້າທ້າທາຍພວກຟີລິດສະຕິນຊຶ່ງເຕົ້າໂຮມກັນທີ່ນັ້ນເພື່ອເຮັດສົງຄາມ, ແລະເມື່ອຄົນອິດສະຣາເອນໄດ້ຖອຍທັບ. 10ເອເລຊາ
ໄດ້ລຸກຂຶ້ນ ແລະໄດ້ຕໍ່ສູ້ພວກຟີລິດສະຕິນ ຈົນກະທັ້ງມືຂອງເຂົາອ່ອນລ້າ ແລະມືຂອງເຂົາເປັນຈັ່ງແຂງຕິດທີ່ດາບຂອງເຂົາ. ພຣະຢາເວໄດ້ຊົງເຮັດ
ໃຫ້ໄດ້ໄຊຊະນະຢ່າງໃຫຍ່ຫລວງໃນມື້ນັ້ນ. ກອງທັບກໍໄດ້ກັບຕາມເອເລຊາ, ເພື່ອປົດເອົາອາວຸດຈາກຜູ້ທີ່ຖືກຂ້າຕາຍເທົ່ານັ້ນ.
11ຮອງຈາກເຂົາລົງມາຄື: ຊາມມາລູກຊາຍຂອງອາກີ, ຊາວຮາຣາເຣ. ພວກຟີລິດສະຕິນ ໄດ້ເຕົ້າໂຮມກັນທີ່ທົ່ງຫຍ້າເລຮີ ເປັນທີ່ມີພື້ນດິນຜືນຫນຶ່ງ
ມີຖົ່ວແດງເຕັມໄປຫມົດ, ແລະກອງທັບກໍຫນີໄປຈາກພວກເຂົາ. 12ແຕ່ຊາມມາໄດ້ຢືນຢູ່ທ່າມກາງຜືນດິນນັ້ນ ແລະປ້ອງກັນຜືນດິນນັ້ນໄວ້ ເຂົາໄດ້ຂ້າ
ພວກຟີລິດສະຕິນ, ແລະພຣະຢາເວຊົງເຮັດໃຫ້ມີໄຊຊະນະຢ່າງໃຫຍ່ຫລວງ.
13ທະຫານສາມນາຍໃນພວກທະຫານສາມສິບຄົນນັ້ນ, ໄດ້ລົງມາຫາດາວິດໃນລະດູກ່ຽວເຂົ້າທີ່ຖ້ຳອາດຸນລຳ. ກອງທັບຂອງຟີລິດສະຕິນໄດ້ຕັ້ງ
ຄ້າຍຢູ່ໃນຮ່ອມພູເຣຟາອີມ. 14ໃນເວລານັ້ນດາວິດໄດ້ຢູ່ໃນທີ່ກຳບັງເຂັ້ມແຂງ, ທີ່ຖ້ຳ, ຂະນະທີ່ພວກຟີລິດສະຕິນກໍໄດ້ຕັ້ງຫລັກແຫລ່ງຢູ່ທີ່ເບັດເລ
ເຮັມ.
15ດາວິດໄດ້ຊົງກະຫາຍນ້ຳ ແລະກ່າວວ່າ, "ຖ້າພຽງບາງຄົນຈະໃຫ້ນ້ຳແກ່ເຮົາດື່ມຈາກນ້ຳສ້າງທີ່ເບັດເລເຮັມ, ນ້ຳສ້າງທີ່ຢູ່ຂ້າງປະຕູເມືອງ!" 16ດັ່ງ
ນັ້ນຈອມທະຫານສາມຄົນທີ່ໄດ້ກ່າວເຖິງນັ້ນກໍໄດ້ແຫກຄ້າຍຂອງກອງທັບຂອງຄົນຟີລິດສະຕິນເຂົ້າໄປ ແລະໄດ້ຕັກນ້ຳຈາກນ້ຳສ້າງເບັດເລເຮັມ,
ນ້ຳສ້າງທີ່ຢູ່ຫນ້າປະຕູເມືອງພວກເຂົາໄດ້ນຳນ້ຳມາແລະໄດ້ມາຖະວາຍແກ່ດາວິດ, ແຕ່ພຣະອົງໄດ້ຊົງປະຕິເສດທີ່ຈະຊົງດື່ມນ້ຳນັ້ນ. ແຕ່ພຣະອົງ
ໄດ້ຊົງເທນ້ຳນັ້ນຖະວາຍແດ່ພຣະຢາເວ. 17ແລ້ວພຣະອົງໄດ້ກ່າວວ່າ, "ຂ້າແດ່ພຣະຢາເວ, ຂ້າພຣະອົງຄວນຈະດື່ມໂລຫິດຂອງບັນດາຜູ້ໄດ້ໄປສ່ຽງ
ຊີວິດຂອງພວກເຂົາຫລື?" ດັ່ງນັ້ນພຣະອົງຈຶ່ງບໍ່ຊົງຍອມດື່ມ. ນັກຮົບທັງສາມໄດ້ເຮັດສິ່ງເຫລົ່ານີ້.
18ອາບີໄຊນ້ອງຊາຍຂອງໂຢອາບແລະລູກຊາຍຂອງນາງເຊຣູອີຢາ, ໄດ້ເປັນຫົວຫນ້າຂອງທັງສາມຄົນນັ້ນ. ຄັ້ງຫນຶ່ງເຂົາໄດ້ຕໍ່ສູ້ດ້ວຍຫອກຕໍ່ທະ
ຫານສາມຮ້ອຍຄົນ. ແລະໄດ້ຂ້າພວກເຂົາ ເຂົາກໍໄດ້ມີຊື່ສຽງຮ່ວມກັບທະຫານເອກສາມຄົນນັ້ນ. 19ເຂົາໄດ້ເປັນຜູ້ບັງຄັບບັນຊາຂອງພວກເຂົາ ຢ່າງ
ໃດກໍຕາມຊື່ສຽງຂອງເຂົາບໍ່ເທົ່າກັບຊື່ສຽງຂອງທະຫານທີ່ມີຊື່ສຽງໂດ່ງດັງທີ່ສຸດສາມຄົນນັ້ນ.
20ເບນາອີຢາແຫ່ງເມືອງກັບເຊເອນລູກຊາຍຂອງເຢໂຮຍອາດາ; ເຂົາເປັນຜູ້ຊາຍແຂງແຮງ ທີ່ໄດ້ເຮັດຄວາມສຳເລັດທີ່ຍິ່ງໃຫຍ່ຫລາຍຢ່າງ. ເຂົາ
ໄດ້ຂ້າລູກຊາຍທັງສອງຂອງອາຣີເອວແຫ່ງໂມອາບ. ເຂົາໄດ້ລົງໄປຂ້າສິງໂຕໃນນ້ຳສ້າງໃນມື້ທີ່ຫິມະຕົກດ້ວຍ. 21ແລ້ວເຂົາໄດ້ຂ້າຄົນອີຢິບຄົນຫນຶ່ງ
ເປັນຜູ້ຊາຍຮູບຮ່າງສູງໃຫຍ່. ຄົນອີຢິບນັ້ນຖືຫອກຢູ່ໃນມື, ແຕ່ເບນາອີຢາໄດ້ຕໍ່ສູ້ກັບເຂົາດ້ວຍພຽງໄມ້ຄ້ອນ. ເຂົາໄດ້ຍຶດເອົາຫອກມາຈາກມືຂອງ
ຄົນອີຢິບຄົນນັ້ນ ແລະໄດ້ຂ້າເຂົາຕາຍດ້ວຍຫອກຂອງເຂົາເອງ.
22ເບນາອີຢາລູກຊາຍຂອງເຢໂຮຍອາດາເຮັດວິລະກິດເຫລົ່ານີ້ຈຶ່ງມີຊື່ສຽງດັ່ງນັກຮົບສາມຄົນນັ້ນ. 23ເຂົາມີຊື່ສຽງໂດ່ງດັງກວ່າທະຫານສາມສິບຄົນ
ນັ້ນໂດຍທົ່ວໄປ, ແຕ່ເຂົາບໍ່ໄດ້ຮັບການນັບຖືຫລາຍເຊັ່ນດຽວກັນກັບທະຫານເອກສາມຄົນນັ້ນ. ສະນັ້ນ ດາວິດກໍໄດ້ຊົງຕັ້ງເຂົາໃຫ້ເປັນທະຫານຮັກ
ຊາພຣະອົງ.
24 ໃນສາມສິບຄົນນັ້ນຮວມຜູ້ຊາຍຕໍ່ໄປນີ້ ຄື ອາສາເຮນນ້ອງຊາຍຂອງໂຢອາບ, ເອນຮານານລູກຊາຍຂອງໂດໂດຊາວເບັດເລເຮັມ, 25ຊາມມາຊາວ
ເມືອງຮາໂຣດ, ເອລີກາຊາວເມືອງຮາໂຣດ, 26ເຮເລັດ, ຊາວເປເລັດ, ອີຣາ, ລູກຊາຍຂອງອິກເກັດຊາວເຕກົວ, 27ອາບີເອເຊຊາວເມືອງອານາທົດ,
ເມບຸນນາຍຊາວຮູຊາ, 28ຊານໂມນຊາວອາໂຮ, ມະຫາໄຣຊາວເນໂຕຟາ.
29ເຮເລັບລູກຊາຍຂອງບາອານາ,ຊາວເນໂຕຟາ, ອິດໄຕລູກຊາຍຂອງຊາວກີເບອາເຜົ່າເບັນຢາມິນ, 30ເບນາອີຢາຊາວປີຣາໂທນ, ຮິດໄຕຊາວຮ່ອມພູ
ໃກ້ເມືອງກາອາດ. 31ອາບີອານໂບນຊາວອາຣະບາ ອາຊະມາເວດຊາວບາຮູຣິມ, 32ເອລີອາຢາ, ຊາວຊາອານໂບນ, ບັນດາລູກຊາຍຂອງຢາເຊນ ໂຢ
ນາທານ.
33ອາຮີອາມລູກຊາຍຂອງຊາຮາກຊາວຮາຣາເຮ, 34ເອລີເຟເລດລູກຊາຍຂອງອາຮາສະໄບຊາວມາອາກາ, ເອລີອາມລູກຊາຍຂອງອາຮີໂຕເຟນ
ຊາວກີໂລ, 35ເຮຊະໂຣຊາວກາເມນ, ປາອາໄຣຊາວອາຣັບ, 36ອີການລູກຊາຍຂອງນາທານຊາວໂຊບາ, ບານີຄົນເຜົ່າກາດ.
37ເຊເລັກຄົນອຳໂມນ, ນາຮາໄຣຊາວເບເອໂຣດ, ຄົນຖືເຄື່ອງອາວຸດຂອງໂຢອາບລູກຊາຍຂອງເຊຣູອີຢາ, 38ອີຣາຊາວອິດໄຣ, ກາຣາເຮັບຊາວອິດໄຣ,
39ອູຣີຢາຄົນຮິດຕີ ລວມທັງຫມົດສາມສິບເຈັດຄົນ.

 generated on Tue Jun 17 19:01:42 2025

24 1ອີກຄັ້ງຫນຶ່ງທີ່ຄວາມໂກດຮ້າຍຂອງພຣະຢາເວເກີດຂຶ້ນຕໍ່ອິດສະຣາເອນ, ແລະພຣະອົງໄດ້ຊົງເຮັດໃຫ້ດາວິດຕໍ່ສູ້ພວກເຂົາ ກ່າວວ່າ, "ຈົ່ງ
ໄປ,ນັບຄົນອິດສະຣາເອນ ແລະຄົນຢູດາ."2ກະສັດຈຶ່ງໄດ້ຊົງຮັບສັ່ງກັບໂຢອາບ, ຜູ້ບັນຊາການທະຫານຊຶ່ງຢູ່ກັບພະອົງວ່າ, "ຈົ່ງໄປໃຫ້ທົ່ວອິດ
ສະຣາເອນທຸກເຜົ່າ, ຕັ້ງແຕ່ເມືອງດານເຖິງເບເອນເຊບາ, ແລະຈົ່ງນັບຈຳນວນປະຊາຊົນ, ເພື່ອເຮົາຈະໄດ້ຮູ້ຈຳນວນລວມຂອງປະຊາຊົນເພື່ອເຮັດ
ສົງຄາມ."

3ໂຢອາບໄດ້ທູນກະສັດວ່າ, "ຂໍພຣະຢາເວພຣະເຈົ້າຂອງທ່ານຊົງເພີ່ມປະຊາຊົນທີ່ມີຢູ່ອີກຮ້ອຍເທົ່າ, ຂໍແນມເຫັນຂອງກະສັດເຈົ້ານາຍຂອງຂ້າ
ນ້ອຍ ໄດ້ຊົງເຫັນສິ່ງທີ່ເກີດຂຶ້ນ. ແຕ່ເຫດການໃດກະສັດເຈົ້ານາຍຂອງຂ້ານ້ອຍ ຈຶ່ງຊົງປະສົງສິ່ງນີ້?"4ຢ່າງໃດກໍຕາມຄຳສັ່ງຂອງກະສັດ ກໍໄດ້ກົດ
ດັນເຖິງທີ່ສຸດຕໍ່ໂຢອາບ ແລະກົດດັນບັນດາຜູ້ບັງຄັບບັນຊາຂອງກອງທັບ. ດັ່ງນັ້ນໂຢອາບກັບບັນດາຜູ້ບັງຄັບບັນຊາ ຂອງກອງທັບຈຶ່ງໄດ້ອອກໄປ
ຈາກຕໍ່ຫນ້າກະສັດ ເພື່ອນັບປະຊາຊົນອິດສະຣາເອນ.
5ພວກເຂົາໄດ້ຂ້າມແມ່ນ້ຳຈໍແດນໄປ ແລະໄດ້ຕັ້ງຄ້າຍໃນເມືອງອາໂຣເອ,ທາງທິດໃຕ້ຂອງເມືອງໃນກາງຮ່ອມພູ ແລ້ວພວກເຂົາກໍໄດ້ເດີນທາງໄປ
ຜ່ານກາດໄປຈົນເຖິງເມືອງຢາເຊ.6ພວກເຂົາກໍໄດ້ມາຍັງກີເລອາດ ແລະມາຮອດໃນດິນແດນຂອງຮິດຕີ, ແລ້ວຕໍ່ໄປຮອດເມືອງດານ ອ້ອມໄປຮອດ
ຊີໂດນ.7ພວກເຂົາໄດ້ມາຮອດປ້ອມຂອງຮິດຕີ ແລະເມືອງທັງຫມົດຂອງຄົນຮີວີ ແລະຂອງຄົນການາອານ. ແລ້ວພວກເຂົາໄດ້ອອກໄປຍັງໃນຢູ
ດາຍ ທີ່ເນເກບເມືອງເບເຍເອເຊບາ.
8ເມື່ອພວກເຂົາໄດ້ໄປທົ່ວແຜ່ນດິນນັ້ນແລ້ວ, ພວກເຂົາຈຶ່ງໄດ້ກັບມາຍັງກຸງເຢຣູຊາເລັມເມື່ອສິ້ນເກົ້າເດືອນແລະຊາວມື້.9ແລ້ວໂຢອາບກໍໄດ້ຖວາຍ
ຈຳນວນທະຫານທີ່ນັບໄດ້ທັງຫມົດແກ່ກະສັດ. ມີທະຫານໃນອິດສະຣາເອນຈຳນວນ 800,000ຄົນ ຜູ້ພ້ອມເຮັດເສິກ, ແລະຄົນຢູດາມີ
500,000ຄົນ.
10ແລ້ວໃຈຂອງດາວິດກໍໄດ້ຊົງສຳນຶກຜິດຫລັງຈາກທີ່ເພິ່ນໄດ້ຊົງນັບຈຳນວນປະຊາຊົນສຳເລັດແລ້ວ. ດັ່ງນັ້ນດາວິດໄດ້ຊົງທູນຕໍ່ພຣະຢາເວວ່າ,
"ຂ້ານ້ອຍໄດ້ເຮັດບາບໃຫຍ່ຫລວງໃນການທີ່ໄດ້ເຮັດສິ່ງນີ້. ບັດນີ້, ຂ້າແດ່ພຣະຢາເວ, ຂໍພຣະອົງຊົງລຶບຄວາມບາບຊົ່ວຂອງຜູ້ຮັບ ໃຊ້ຂອງພຣະ
ອົງອອກໄປ, ເພາະຂ້ານ້ອຍເຮັດຢ່າງໂງ່ຈ້າທີ່ສຸດ."
11ເມື່ອດາວິດໄດ້ຊົງລຸກຂຶ້ນໃນຕອນເຊົ້າ, ຖ້ອຍຄຳຂອງພຣະຢາເວກໍໄດ້ມາຍັງກາດ, ຜູ້ທຳນວຍຂອງ ດາວິດວ່າ,12"ຈົ່ງໄປບອກດາວິດວ່າ: 'ພຣະ
ຢາເວກ່າວດັ່ງນີ້ວ່າ: "ເຮົາຈະໃຫ້ເຈົ້າມີທາງເລືອກສາມຢ່າງ. ຈົ່ງເລືອກເອົາຫນຶ່ງຢ່າງ."'"
13ດັ່ງນັ້ນກາດຈຶ່ງໄດ້ເຂົ້າເຝົ້າດາວິດ ແລະໄດ້ທູນເພິ່ນວ່າ, "ຈະໃຫ້ເກີດອຶດຢາກອາຫານເປັນເວລາສາມປີ ໃນແຜ່ນດິນຂອງທ່ານຫລືບໍ່? ຫລື
ທ່ານຈະຍອມຫນີຕໍ່ຫນ້າສັດຕູຂອງທ່ານ ເປັນເວລາສາມເດືອນ ຂະນະທີ່ພວກເຂົາໄລ່ຕາມທ່ານຫລືບໍ່? ຫລືຈະໃຫ້ໂຣກລະບາດເກີດຂຶ້ນໃນແຜ່ນ
ດິນ ຂອງທ່ານເປັນເວລາສາມມື້ຫລືບໍ່? ບັດນີ້ຂໍທ່ານໄດ້ຊົງຄິດເບິ່ງວ່າຈະໃຫ້ຂ້ານ້ອຍ ກັບໄປທູນສິ່ງໃດຕໍ່ພຣະອົງຜູ້ຊົງໃຊ້ຂ້ານ້ອຍມາ."14ແລ້ວດາ
ວິດຈຶ່ງໄດ້ກ່າວກັບກາດວ່າ, "ເຮົາເປັນທຸກຫລາຍ. ຂໍໃຫ້ພວກເຮົາຕົກເຂົ້າໄປຢູ່ໃນມືຂອງພຣະຢາເວຫລາຍກວ່າ ໃຫ້ເຮົາຕົກເຂົ້າໄປໃນມືຂອງມະ
ນຸດ, ເພາະພຣະອົງມີໃຈເມດຕາໃຫຍ່ຫລາຍ."
15ດັ່ງນັ້ນພຣະຢາເວຈຶ່ງໄດ້ຊົງໃຫ້ໂຣກລະບາດເກີດຂຶ້ນ ໃນອິດສະຣາເອນຕັ້ງແຕ່ເວລາເຊົ້າຈົນຫມົດເວລາກຳນົດ, ແລະປະຊາຊົນທີ່ໄດ້ຕາຍຈຳ
ນວນເຈັດຫມື່ນຄົນນັບຕັ້ງແຕ່ເມືອງດານເຖິງເບເອນເຊບາ.16ເມື່ອເທວະດາເດ່ມືອອກເຫນືອນະຄອນເຢຣູຊາເລັມ ເພື່ອທຳລາຍເມືອງນັ້ນ, ພຣະຢາ
ເວໄດ້ຊົງປ່ຽນໃຈເພາະເລື່ອງເຫດຮ້າຍ ທີ່ຈະເກີດຂຶ້ນນັ້ນ, ແລະພຣະອົງໄດ້ຊົງບັນຊາເທວະດາ ຜູ້ກຳລັງທຳລາຍປະຊາຊົນວ່າ, "ພໍແລ້ວ! ບັດນີ້
ຈົ່ງຢຸດມືຂອງເຈົ້າ." ໃນເວລານັ້ນທູດຂອງພຣະຢາເວກໍຢູ່ທີ່ລານຟາດເຂົ້າຂອງອາໂຣນາຄົນເຢບຸດ.
17ແລ້ວດາວິດໄດ້ທູນຕໍ່ພຣະຢາເວຂະນະທີ່ພຣະອົງເຫັນຝູງເທວະດາຜູ້ທີ່ໄດ້ປະຫານປະຊາຊົນນັ້ນ, ແລະໄດ້ຊົງທູນວ່າ, "ຂ້ານ້ອຍເອງໄດ້ເຮັດ
ບາບ, ແລະຂ້ານ້ອຍໄດ້ເຮັດທີ່ເອົາແຕ່ໃຈຕົນເອງ. ແຕ່ບັນດາແກະເຫລົ່ານີ້, ພວກເຂົາໄດ້ເຮັດຫຍັງ? ຂໍມືຂອງພຣະອົງທຳໂທດຂ້ານ້ອຍພຣະອົງ
ແລະເຊື້ອສາຍພໍ່ຂອງຂ້ານ້ອຍເຖີດ!"
18ແລ້ວກາດກໍໄດ້ເຂົ້າມາເຝົ້າດາວິດ ແລະໄດ້ທູນເພິ່ນວ່າ, "ຂໍຂຶ້ນໄປສ້າງແທ່ນບູຊາຖວາຍແດ່ພຣະຢາເວເທິງລານຟາດເຂົ້າຂອງອາໂຣນາຄົນເຢ
ບຸດເຖີດ."19ດັ່ງນັ້ນດາວິດກໍໄດ້ຂຶ້ນໄປ,ຕາມຄຳຂອງກາດຕາມທີ່ພຣະຢາເວໄດ້ຊົງບັນຊາ.20ເມື່ອອາໂຣນາໄດ້ຫັນອອກໄປ ແລະໄດ້ເຫັນກະສັດ
ແລະບັນດາຂ້າຣາຊການກຳລັງເຂົ້າມາຫາເຂົາ. ດັ່ງນັ້ນອາໂຣນາກໍໄດ້ອອກໄປ ແລະໄດ້ກົ້ມຕົວລົງກາບລົງດິນຕໍ່ກະສັດ.
21ແລ້ວອາໂຣນາໄດ້ທູນວ່າ, "ເຫດໃດກະສັດເຈົ້ານາຍຂອງຂ້ານ້ອຍ,ຈຶ່ງໄດ້ມາຫາຜູ້ຮັບໃຊ້ຂອງທ່ານ?" ດາວິດໄດ້ກ່າວວ່າ, "ມາຊື້ລານຟາດເຂົ້າ
ຂອງເຈົ້າ, ເພື່ອເຮົາຈະສ້າງແທ່ນບູຊາຖວາຍແດ່ພຣະຢາເວ, ເພື່ອທີ່ເລື່ອງໂຫດຮ້າຍຈະຫມົດໄປຈາກປະຊາຊົນ."22ນາໂຣນາຈຶ່ງໄດ້ທູນດາວິດວ່າ,
"ຂໍກະສັດເຈົ້ານາຍຂອງຂ້ານ້ອຍ. ຂໍຊົງໄດ້ເຮັດຕາມທີ່ສາຍຕາຍ ຂອງທ່ານເຫັນດີເຖີດ. ເບິ່ງເຖີດ, ທີ່ນີ້ມີງົວສຳຫລັບເຄື່ອງບູຊາເຜົາທັງຕົວ ແລະ
ໄມ້ຟາດເຂົ້າກັບແອກສຳລັບເປັນຟືນ ຂ້າແດ່ກະສັດ.23ຂອງທັງຫມົດນີ້ຂ້ານ້ອຍ ອາໂຣນາຂໍຖວາຍແດ່ທ່ານ," ແລ້ວເຂົາໄດ້ທູນກະສັດອີກວ່າ, "ຂໍພ
ຣະຢາເວພຣະເຈົ້າຂອງທ່ານຊົງໂປດປານທ່ານ."
24ກະສັດໄດ້ກ່າວກັບອາໂຣນາວ່າ, "ບໍ່ໄດ້, ເຮົາຢືນຢັນທີ່ຈະຊື້ຈາກເຈົ້າຕາມລາຄານັ້ນ. ເຮົາຈະບໍ່ຖວາຍເຄື່ອງບູຊາເຜົາທັງຕົວແດ່ພຣະຢາເວ ໂດຍ
ທີ່ເຮົາບໍ່ເສຍຫຍັງເລີຍ." ດັ່ງນັ້ນດາວິດຈຶ່ງໄດ້ຊົງຊື້ລານຟາດເຂົ້າ ແລະງົວເປັນເງິນຫ້າສິບຫລຽນ.25ດາວິດກໍໄດ້ຊົງສ້າງແທ່ນບູຊາຖວາຍແດ່ພຣະ
ຢາເວທີ່ນັ້ນ ແລະຊົງໄດ້ຖວາຍເຄື່ອງເຜົາບູຊາທັງຕົວກັບເຄື່ອງບູຊາ. ດັ່ງນັ້ນພວກເຂົາໄດ້ທູນອ້ອນວອນຕໍ່ພຣະຢາເວໃນນາມຂອງແຜ່ນດິນ ແລະພ
ຣະອົງກໍໄດ້ຊົງລະງັບໂກດຮ້າຍທົ່ວອິດສະຣາເອນ.

# 1 ກະສັດ

1 1ເມື່ອກະສັດດາວິດກໍເຖົ້າແກ່ຫລາຍແລ້ວ, ເຖິງວ່າພວກເຂົາກໍຫົ່ມຜ້າໃຫ້ເພິ່ນ, ແຕ່ກໍຍັງບໍ່ອົບອຸ່ນ.
2ດັ່ງນັ້ນຜູ້ຮັບໃຊ້ຂອງເພິ່ນຈຶ່ງໄດ້ບອກເພິ່ນວ່າ, "ຂໍໃຫ້ພວກຂ້ານ້ອຍຊອກຫາສາວພົມມະຈາລີມາຖວາຍແດ່ກະສັດ
ເຈົ້ານາຍຂອງພວກຂ້ານ້ອຍ. ໃຫ້ນາງຖວາຍການບົວລະບັດ ແລະ ຄອຍດູແລພະອົງ. ໃຫ້ນາງນອນໃນອ້ອມກອດຂອງພະອົງ
ເພື່ອກະສັດເຈົ້ານາຍຂອງຂ້ານ້ອຍຈະໄດ້ອົບອຸ່ນ."

[3]ດັ່ງນັ້ນພວກເຂົາຈຶ່ງໄດ້ເສາະຊອກຫາຍິງງາມທົ່ວເຂດແດນຂອງອິດສະຣາເອນ. ພວກເຂົາກໍໄດ້ພົບອາບີຊາກຜູ້ຍິງຊາວຊູເນມ ແລະ
ໄດ້ນຳຕົວນາງມາເຝົ້າກະສັດ.[4]ຜູ້ຍິງຄົນນັ້ນງາມຫລາຍ. ນາງໄດ້ຖວາຍການບົວລະບັດກະສັດ ແລະ ຄອຍດູແລພະອົງ,
ແຕ່ກະສັດບໍ່ໄດ້ສົມສູ່ກັບນາງ.
[5]ໃນເວລານັ້ນ, ອາໂດນີຢາລູກຊາຍຂອງຮັກກິດໄດ້ຍົກຕົວເອງຂຶ້ນ, ກ່າວວ່າ, "ເຮົາຈະເປັນກະສັດ." ດັ່ງນັ້ນ ທ່ານຈຶ່ງໄດ້ຕຽມບັນດາລົດມ້າເສິກ
ແລະ ກອງທະຫານມ້າສຳລັບທ່ານເອງກັບຄົນຫ້າສິບຄົນໄວ້ແລ່ນນຳໜ້າທ່ານ.[6]ພະບິດາຂອງເພິ່ນກໍບໍ່ໄດ້ເຄີຍຂັດໃຈ, ໂດຍກ່າວວ່າ,
"ເປັນຫຍັງເຈົ້າຈຶ່ງເຮັດແບບນັ້ນ?" ອາໂດນີຢາເປັນຜູ້ຊາຍທີ່ງາມຫລາຍ, ທ່ານເກີດມາຫລັງຈາກອັບຊາໂລມ.
[7]ທ່ານໄດ້ຄົບຄິດກັບໂຢອາບ ລູກຊາຍຂອງນາງເຊຣູອີຢາ ແລະ ກັບອາບີຢາປະໂລຫິດ. ພວກເຂົາໄດ້ຕິດຕາມອາໂດນີຢາ ແລະ
ໄດ້ຊ່ວຍເຫລືອທ່ານ.[8]ແຕ່ຊາໂດກປະໂຣຫິດ, ເບນາອີຢາ ລູກຊາຍຂອງເຢໂຮຍຢາດາ, ນາທານຜູ້ເຜີຍພຣະວັດຈະນະ, ຊີເມອີ, ເຣອີ ແລະ
ພວກທະຫານກ້າຂອງດາວິດບໍ່ໄດ້ຕິດຕາມອາໂດນີຢາ.
[9]ອາໂດນີຢາໄດ້ຖວາຍບູຊາແກະ, ງົວ, ແລະລູກງົວຕຸ້ຍພີທີ່ໂງ່ນຫີນໃກ້ກັບເອນໂຣເກນ, ທ່ານໄດ້ເຊີນພີ່ນ້ອງທັງຫມົດຂອງທ່ານ
ຄືບັນດາລູກຊາຍຂອງດາວິດ ແລະ ປະຊາຊົນທັງຫມົດແຫ່ງຢູດາ, ທີ່ເປັນພວກຂ້າຣາຊະການຂອງກະສັດ.
[10]ແຕ່ທ່ານບໍ່ໄດ້ເຊີນນາທານຜູ້ເຜີຍພຣະວັດຈະນະ, ເບນາອີຢາ, ພວກທະຫານກ້າ ຫລື ຊາໂລໂມນນ້ອງຊາຍຂອງທ່ານ.
[11]ແລ້ວນາທານກໍໄດ້ຖາມຣາຊີນີບັດເຊບາແມ່ຂອງໂຊໂລໂມນ, ວ່າ, "ຣາຊີນີບໍ່ໄດ້ຍິນບໍ່ວ່າອາໂດນີຢາ
ລູກຊາຍຂອງນາງຮັກກິດໄດ້ແຕ່ງຕັ້ງຕົນເອງຂຶ້ນເປັນກະສັດແລ້ວ, ແລະ ດາວິດຜູ້ນຳຂອງພວກເຮົາກໍບໍ່ຊົງຮູ້ເລື່ອງນີ້ບໍ?
[12]ບັດນີ້ຂໍໃຫ້ຂ້ານ້ອຍຖວາຍຄຳແນະນຳ, ເພື່ອຣາຊີນີຈະໄດ້ຊ່ວຍຊີວິດຂອງຕົນເອງ ແລະ ຊີວິດຂອງໂຊໂລໂມນລູກຊາຍຂອງຣາຊີນີດ້ວຍ.
[13]ໃຫ້ຣາຊີນີເຂົ້າເຝົ້າກະສັດດາວິດ; ແລະທູນຖາມພະອົງວ່າ, "ຂ້າແດ່ພະຣາຊາ, ພະອົງໄດ້ສັນຍາກັບຂ້ານ້ອຍແລ້ວບໍ່ແມ່ນບໍ່ວ່າ,
"ໂຊໂລໂມນລູກຊາຍຂອງຂ້ານ້ອຍຈະເປັນກະສັດສືບແທນທ່ານ?
"ແລ້ວເປັນຫຍັງຈຶ່ງໃຫ້ອາໂດນີຢາຂຶ້ນເປັນກະສັດ?"[14]ໃນຂະນະທີ່ຣາຊີນີກາບທູນກະສັດຢູ່, ຂ້ານ້ອຍນຳເຂົ້າໄປເຝົ້າ ແລະ
ສະຫນັບສະຫນູນຄຳເວົ້າຂອງຣາຊີນີ."
[15]ດັ່ງນັ້ນບັດເຊບາ ກໍໄດ້ເຂົ້າໄປທີ່ຫ້ອງຂອງກະສັດ. ກະສັດຊົງເຖົ້າຫລາຍ, ແລະ ອາບີຊາກຊາວຊູເນມກໍກຳລັງຖວາຍການຮັບໃຊ້ກະສັດຢູ່.
[16]ບັດເຊບາກົ້ມຂາບກະສັດ ແລະ ກະສັດກໍກ່າວຖາມວ່າ, "ເຈົ້າຕ້ອງການສິ່ງໃດບໍ?"[17]ຣາຊີນີໄດ້ຕອບພະອົງວ່າ, "ຂ້າແດ່ພະຣາຊາ,
ທ່ານໄດ້ສາບານຕໍ່ຜູ້ຮັບໃຊ້ຂອງທ່ານໃນພຣະນາມຂອງພຣະຢາເວພຣະເຈົ້າຂອງທ່ານ, ວ່າ
"ແນ່ນອນໂຊໂລໂມນລູກຂອງຂ້ານ້ອຍຈະໄດ້ຂຶ້ນເປັນກະສັດສືບແທນທ່ານ ແລະ ເຂົາຈະນັ່ງບັນລັງຂອງທ່ານ."
[18]ບັດນີ້, ເບິ່ງແມ້, ອາໂດນີຢາເປັນກະສັດແລ້ວ, ແມ້ແຕ່ພຣະອົງກະສັດເຈົ້ານາຍຂອງຂ້ານ້ອຍ ກໍບໍ່ຮູ້ກ່ຽວກັບເລື່ອງນີ້ເລີຍ.
[19]ເຂົາໄດ້ຖວາຍສັດບູຊາງົວ, ລູກໂຕອ້ວນພີ, ແລະ ແກະຈຳນວນມາກມາຍຫລວງຫລາຍ, ແລະ ໄດ້ເຊີນບັນດາລູກຊາຍຂອງກະສັດ,
ອາບີອາທາປະໂຣຫິດ, ແລະ ໂຢອາບຜູ້ບັນຊາການກອງທັບ, ແຕ່ເຂົາບໍ່ໄດ້ເຊີນໂຊໂລໂມນຜູ້ຮັບໃຊ້ຂອງພະອົງ.
[20]ເພາະພະອົງ, ຄືກະສັດເຈົ້ານາຍຂອງຂ້ອຍ, ສາຍຕາຂອງອິດສະຣາເອນທັງຫມົດກໍເບິ່ງພະອົງ, ຖ້າພະອົງບອກກັບເຂົາວ່າ
ຈະເຮັດໃຫ້ໃຜນັ່ງເທິງບ່ອນນັ່ງຂອງເຈົ້ານາຍຂອງຂ້ານ້ອຍຕໍ່ຈາກພະອົງ, ຜູ້ນຳຂອງຂ້ານ້ອຍ.[21]ເພາະສະນັ້ນຈະເປັນດັ່ງນີ້,
ຄືເມື່ອກະສັດເຈົ້ານາຍຂອງຂ້ານ້ອຍຕາຍໄປແລ້ວ, ຂ້ານ້ອຍ ແລະ ໂຊໂລໂມນລູກຊາຍຂອງຂ້ອຍກໍຕົກເປັນຝ່າຍຜິດ."
[22]ໃນຂະນະທີ່ຣາຊີນີກຳລັງກາບທູນກະສັດຢູ່, ນາທານຜູ້ເຜີຍພຣະວັດຈະນະໄດ້ເຂົ້າມາ.[23]ຜູ້ຮັບໃຊ້ໄດ້ທູນຕໍ່ກະສັດວ່າ,
"ນາທານຜູ້ເຜີຍພຣະວັດຈະນະຢູ່ບ່ອນນີ້ແລ້ວ" ເມື່ອນາທານເຂົ້າມາຕໍ່ຫນ້າກະສັດ, ເຂົາກໍກົ້ມກາບຫນ້າຈົນຈຸພື້ນ ຖວາຍບັງຄົມກະສັດ.
[24]ແລ້ວນາທານກໍເວົ້າວ່າ, "ຂ້າແດ່ກະສັດເຈົ້ານາຍຂອງຂ້ານ້ອຍໄດ້ສັ່ງໄວ້ບໍ່ວ່າ, "ອາໂດນີຢາ ຈະຄອງຣາດຕໍ່ຈາກເຮົາ, ແລະ
ເຂົາຈະນັ່ງບັນລັງຂອງເຮົາ?"[25]ເພາະມື້ນີ້ທ່ານໄດ້ໄປຖວາຍບູຊາງົວ, ລູກງົວຕຸ້ຍພີ, ແລະ ແກະຈຳນວນຫລາຍ, ແລະ
ໄດ້ເຊີນບັນດາໂອຣົດຂອງກະສັດທັງຜູ້ບັນຊາການກອງທັບ, ແລະ ອາບີອາທາປະໂຣຫິດ. ພວກເຂົາທັງຫລາຍກຳລັງກິນດື່ມຕໍ່ຫນ້າທ່ານ, ແລະ
ກ່າວວ່າ, 'ຂໍກະອາໂດນີຢາຈົ່ງອາຍຸຫມັ້ນຍືນ!'
[26]ແຕ່ສ່ວນຂ້ານ້ອຍ, ຜູ້ຮັບໃຊ້ຂອງພຣະອົງ, ຊາໂດກຜູ້ເປັນປະໂຣຫິດ, ເບໄນຢາບຸດຊາຍຂອງເຢໂຮຢາດາ, ແລະ ໂຊໂລໂມນຜູ້ຮັບໃຊ້ຂອງພະອົງ,
ທ່ານໄດ້ເຊີນພວກເຮົາຫລືບໍ່.[27]ເຫດການນີ້ເກີດຂຶ້ນໂດຍກະສັດເຈົ້ານາຍຂອງຂ້ານ້ອຍ ພະອົງບໍ່ໄດ້ບອກພວກເຮົາ, ພວກຜູ້ຮັບໃຊ້ຂອງພະອົງ, ວ່າ
ຈະຊົງໃຫ້ໃຜນັ່ງເທິງບ່ອນນັ່ງຕໍ່ຈາກພະອົງບໍ?"
[28]ແລ້ວກະສັດດາວິດໄດ້ຕອບ ແລະ ເວົ້າວ່າ, "ຈົ່ງເອີ້ນບັດເຊບາກັບຄືນມາຫາເຮົາ." ຣາຊີນີກໍເຂົ້າມາເຝົ້າຕໍ່ຫນ້າກະສັດ ແລະ
ຊົງຢືນຢູ່ຕໍ່ຫນ້າກະສັດ.[29]ກະສັດຊົງປະຕິຍານ ແລະ ກ່າວວ່າ, "ຂ້າແດ່ພຣະເຈົ້າຢາເວຜູ້ຊົງພຣະຊົນຢູ່,
ຜູ້ຊົງໄຖ່ຊີວິດຂອງເຮົາຈາກຄວາມທຸກຍາກ,[30]ມື້ນີ້ເຮົາໄດ້ປະຕິຍານຕໍ່ໃນພຣະນາມຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວວ່າ,
"ໂຊໂຣໂມນລູກຊາຍຂອງເຈົ້າຈະຄອງຣາດຈາກເຮົາແນ່ນອນ, ແລະ ເຂົາຈະນັ່ງບັນລັງແທນເຮົາ,'
ເຮົາຈະເຮັດແນວນີ້ໃນວັນນີ້."[31]ແລ້ວຣາຊານີບັດເຊບາກໍໄດ້ກົ້ມຫົວລົງພື້ນ ແລະ ຕໍ່ຫນ້າກະສັດ ແລະ ເວົ້າວ່າ,
"ຂໍກະສັດດາວິດເຈົ້ານາຍຂອງຂ້ອຍຊົງຈະເລີນເປັນນິດ!"
[32]ກະສັດດາວິດໄດ້ມີຮັບສັ່ງວ່າ, "ຈົ່ງເອີ້ນຊາໂດກປະໂຣຫິດ, ນາທານຜູ້ເຜີຍພຣະວັດຈະນະ, ກັບເບໄນຢາບຸດຊາຍຂອງເຢໂຮຢາດາມາຫາເຮົາ."
ດັ່ງນັ້ນເຂົາທັງຫລາຍຈຶ່ງເຂົ້າມາເຝົ້າຕໍ່ພຣະພັກກະສັດ.[33]ກະສັດກໍສັ່ງເຂົາທັງຫລາຍວ່າ, "ຈົ່ງພາຂ້າຣາຊາການຂອງເຈົ້ານາຍຂອງພວກເຈົ້າ,
ແລະ ໃຫ້ໂຊໂຣໂມນລູກຊາຍຂອງເຮົາຂີ່ລໍຂອງເຮົາ ແລະ ນຳເຂົາລົງໄປທີ່ກີໂຮນ.[34]ໃຫ້ຊາໂດກປະໂຣຫິດ ແລະ
ນາທານຜູ້ເຜີຍພຣະວັດຈະນະເຈີມເຂົາໃຫ້ເປັນກະສັດເຫນືອອິດສະຣາເອນທີ່ນັ້ນ ແລ້ວຈຶ່ງເປົ່າແກ ແລະ ປະກາດວ່າ,
"ຂໍກະສັດໂຊໂລໂມນຊົງດຳລົງຢູ່ຕະຫລອດໄປ!'
[35]ແລ້ວເຈົ້າທັງຫລາຍຈົ່ງຕິດຕາມເຂົາຂຶ້ນມາ, ແລະ ເຂົາຈະມານັ່ງເທິງບັນລັງຂອງເຮົາ; ເພາະເຂົາຈະເປັນກະສັດແທນເຮົາ.
ເຮົາໄດ້ຕັ້ງເຂົາໃຫ້ເປັນຜູ້ຄອບຄອງເຫນືອອິດສະຣາເອນ ແລະຢູດາ."[36]ເບໄນຢາບຸດຊາຍຂອງກະສັດເຢໂຮຢາດາໄດ້ນົບ, ແລະ ເວົ້າວ່າ,
"ຂໍໃຫ້ເປັນດັ່ງນັ້ນເຖີດ! ຂໍພຣະຢາເວ, ເຈົ້າແຫ່ງກະສັດເຈົ້ານາຍຂອງຂ້ານ້ອຍ, ໄດ້ຢືນຢັນດັ່ງນັ້ນ.

[37]ພຣະຢາເວໄດ້ສະຖິດກັບກະສັດເຈົ້ານາຍຂອງຂ້າພຣະອົງມາແລ້ວຢ່າງໃດ, ກໍຂໍໃຫ້ສະຖິດກັບໂຊໂລໂມນຢ່າງນັ້ນ, ແລະ
ຂໍຊົງເຮັດໃຫ້ບັນລັງຂອງໂຊໂລໂມນໃຫຍ່ຫລາຍກວ່າບັນລັງຂອງກະສັດດາວິດເຈົ້ານາຍຂອງຂ້ານ້ອຍ."
[38]ດັ່ງນັ້ນຊາດົກປະໂຣຫິດ, ນາຫານຜູ້ເຜີຍພຣະວັດຈະນະ, ແລະ ເບໄນຢາບຸດຊາຍຂອງເຢໂຮຢາດາ, ແລະ ຄົນເກເຣັດ ແລະຊາວເປເລັດ
ຈຶ່ງໃຫ້ໂຊໂລໂມນນັ່ງເທິງໂຕລໍຂອງກະສັດດາວິດ; ພວກເຂົາໄດ້ນໍາທາງມາເຖິງກີໂຮນ.[39]ຊາດົກປະໂຣຫິດໄດ້ນໍາເຂົາສັດທີ່ບັນຈຸນ້ໍາມັນມາຈາກເຕັນ
ແລະ ໄດ້ເຈີມຕັ້ງໂຊໂລໂມນໄວ້. ແລ້ວພວກເຂົາກໍໄດ້ເປົ່າແກ, ແລະ ປະຊາຊົນທັງປວງໄດ້ກ່າວວ່າ,
"ຂໍກະສັດໂຊໂລໂມນຊົງກະເສີມສໍາລານ!"[40]ແລ້ວປະຊາຊົນທັງປວງກໍໄດ້ຕາມພະອົງຂຶ້ນໄປ, ພ້ອມກັບໄດ້ເປົ່າຂຸ່ຍດ້ວຍຄວາມຍິນດີ
ຈົນແຜ່ນດິນສະເທືອນເພາະສຽງຂອງພວກເຂົາ.
[41]ເມື່ອອາໂດນີຢາ ແລະ ບັນດາແຂກທີ່ຢູ່ກັບພວກເຂົາໄດ້ກິນອາຫານແລ້ວໆ ກໍໄດ້ຍິນສຽງນັ້ນ. ເມື່ອໂຢອາບໄດ້ຍິນສຽງແກ, ເຂົາໄດ້ເວົ້າວ່າ
"ເປັນຫຍັງຄືມີສຽງແຊວໃນເມືອງນັ້ນ?"[42]ຂະນະທີ່ເຂົາກໍາລັງເວົ້າຢູ່, ໂຢນາທານລູກຊາຍຂອງອາບີຢາປະໂຣຫິດໄດ້ມາຮອດ ແລະ
ອາໂດນີຢາໄດ້ກ່າວວ່າ, "ເຂົ້າມາສາ, ເພາະເຈົ້າເປັນຄົນດີ ແລະໄດ້ເອົາຂ່າວດີມາ."
[43]ໂຢນາທານໄດ້ນົບອາໂດຣີຢາ ແລະ ເວົ້າວ່າ, "ກະສັດດາວິດເຈົ້ານາຍຂອງພວກເຮົາໄດ້ເຮັດໃຫ້ໂຊໂລໂມນເປັນກະສັດແລ້ວ,[44]ແລະ
ກະສັດມີຄໍາສັ່ງສົ່ງຊາດົກປະໂຣຫິດ, ນາທານຜູ້ເຜີຍພຣະວັດຈະນະ, ເບໄນຢາບຸດຊາຍຂອງເຢໂຮຍອາດາ, ກັບຄົນເກເຣັດ ແລະ ຊາວເປເລັດ.
ພວກເຂົາໄດ້ແຫ່ໂຊໂລໂມນໄປ.[45]ຊາດົກກັບປະໂຣຫິດກັບນາທານຜູ້ເຜີຍພຣະວັດຈະນະໄດ້ເຈີມເຂົາໃຫ້ເປັນກະສັດທີ່ກີໂຮນ, ແລະ
ເຂົາທັງຫລາຍກໍຂຶ້ນມາຈາກທີ່ນັ້ນດ້ວຍ ຄວາມຍິນດີ, ເພາະສະນັ້ນໃນເມືອງຈຶ່ງຟົດສະນັ່ນ. ນີ້ແມ່ນສຽງທີ່ທ່ານໄດ້ຍິນ.
[46]ນອກຈາກນີ້, ໂຊໂລໂມນໄດ້ນັ່ງເທິງບັນລັງຂອງອານາຈັກດ້ວຍ.[47]ຫລາຍກວ່ານັ້ນອີກ,
ພວກບັນດາຂ້າຣາດຊະການຂອງກະສັດກໍໄດ້ເຂົ້າໄປຖວາຍພຣະພອນແກ່ກະສັດດາວິດ, ເຈົ້ານາຍຂອງພວກເຮົາວ່າ,
"ຂໍພຣະເຈົ້າຂອງເຈົ້າເຮັດໃຫ້ນາມຂອງໂຊໂລໂມນດີຍິ່ງກວ່ານາມຂອງພະອົງ, ແລະ ເຮັດໃຫ້ບັນລັງຂອງເຂົາຍິ່ງໃຫຍ່ກວ່າຂອງພະອົງ.'
ແລ້ວກະສັດກໍກົ້ມໂຕລົງບ່ອນນອນ.[48]ກະສັດກໍເວົ້າວ່າ, "ສາທຸການແດ່ພຣະຢາເວຂອງອິດສະຣາເອນ,
ຜູ້ປະທານຄົນຫນຶ່ງໃຫ້ບັນລັງຂອງເຮົາໃນມື້ນີ້, ແລະ ດ້ວຍຕາຂອງເຮົາເອງໃນມື້ນີ້ຄວນເບິ່ງເຫັນ.'"
[49]ແລ້ວແຂກທັງປວງຂອງອາໂດນີຢາກໍຢ້ານ. ພວກເຂົາໄດ້ລຸກຂຶ້ນ ແລະ ຕ່າງຄົນຕ່າງໄປຕາມທາງຂອງຕົນ.[50]ສ່ວນອາໂດນີຢາກໍຢ້ານໂຊໂລໂມນ
ແລະ ຈຶ່ງລຸກຂຶ້ນ, ແລະ ໄດ້ໄປຈັບທີ່ແຈຂອງແທ່ນບູຊາ.[51]ແລ້ວມີຄົນໄປກາບທູນໂຊໂລໂມນວ່າ, "ເບິ່ງແມ້, ອາໂດນີຢາຢ້ານກະສັດໂຊໂລໂມນ,
ເພາະທ່ານຈັບແຈຂອງແທ່ນບູຊາຢູ່, ເວົ້າວ່າ, 'ຂໍກະສັດໂຊໂລໂມນໄດ້ປະຕິຍານຕໍ່ຂ້າພະເຈົ້າກ່ອນວ່າ
ຈະບໍ່ປະຫານຜູ້ຮັບໃຊ້ຂອງພະອົງດ້ວຍດາບ.'"
[52]ໂຊໂລໂມນໄດ້ເວົ້າວ່າ, "ຖ້າແມ່ນວ່າເຂົາສໍາແດງໂຕວ່າເປັນຄົນດີ, ແມ່ນແຕ່ຜົມເສັ້ນດຽວເຂົາຈະບໍ່ຕົກລົງດິນ,
ແຕ່ຖ້າພົບຄວາມຊົ່ວຢູ່ໃນໂຕເຂົາ, ເຂົາຈະຕ້ອງເຖິງແກ່ຄວາມຕາຍ."[53]ດັ່ງນັ້ນກະສັດໂຊໂລໂມນໄດ້ໃຊ້ຄົນໄປນໍາຄົນລົງມາຈາກແທ່ນບູຊາ.
ທ່ານກໍມາ ແລະ ກາບຕໍ່ກະສັດໂຊໂລໂມນ, ແລະ ໂຊໂລໂມນໄດ້ເວົ້າກັບເຂົາວ່າ, "ຈົ່ງກັບໄປວັງຂອງເຈົ້າເຖີດ."

# 2

[1]ເມື່ອໃກ້ເວລາທີ່ດາວິດຈະສິ້ນໃຈຕາຍ, ເພິ່ນໄດ້ຊີ້ງບອກໂຊໂລໂມລູກຂອງເພິ່ນ, ເວົ້າວ່າ,[2]"ພໍ່ກໍາລັງຈະຕາຍແລ້ວ. ຈົ່ງເຂັ້ມແຂງ,
ດັ່ງນັ້ນຈົ່ງສໍາແດງຕົວຂອງເຈົ້າໃຫ້ເປັນລູກຜູ້ຊາຍ.[3]ຈົ່ງຮັກສາພຣະບັນຊາຂອງພຣະຢາເວ ພຣະເຈົ້າຂອງເຈົ້າ,
ເພື່ອວ່າເຈົ້າຈະສໍາເລັດຜົນໃນທຸກສິ່ງທີ່ເຈົ້າເຮັດ, ທີ່ຈະເຊື່ອຟັງກົດບັນຍັດ, ແລະ ກົດແຫ່ງພັນທະສັນຍາຂອງພຣະອົງ,
ຈົ່ງລະມັດລະວັງທີ່ຈະຖືປະຕິບັດດັ່ງທີ່ໄດ້ບັນທຶກໄວ້ໃນກົດ ຫມາຍຂອງໂມເຊ, ສະນັ້ນທ່ານຈະເລີນຮຸ່ງເຮືອງທຸກສິ່ງທີ່ທ່ານເຮັດ, ທຸກບ່ອນທີ່ທ່ານ
ໄປ,[4]ເພື່ອທີ່ພຣະເຈົ້າຢາເວຈະໄດ້ເຮັດໃຫ້ພຣະວັດຈະນະຂອງພຣະອົງ ຊຶ່ງພຣະອົງໄດ້ກ່າວກ່ຽວກັບເຮົາວ່າ,
"ຖ້າບັນດາລູກຊາຍຂອງເຈົ້າລະມັດລະວັງທີ່ຈະດໍາເນີນ, ໃນທາງຂອງເຂົາຕໍ່ຫນ້າເຮົາດ້ວຍຄວາມຊື່ສັດ, ດ້ວຍສຸດຈິດສຸດໃຈຂອງພວກເຂົາ,
ແລ້ວເຈົ້າຈະບໍ່ຂາດຄົນສືບທອດທີ່ຈະນັ່ງເທິງບັນລັງຂອງອິດສະຣາເອນ.'

[5]ເຈົ້າເອງກໍ່ຮູ້ວ່າ ໂຢອາບລູກຊາຍຂອງນາງເຊຣູອີຢາໄດ້ເຮັດຫຍັງຕໍ່ເຮົາ, ແລະ
ເຂົາໄດ້ເຮັດຫຍັງຕໍ່ຜູ້ບັນຊາການກອງທັບຂອງຊາດອິດສະຣາເອນສອງຄົນຄື, ອັບເນລູກຊາຍຂອງເນຣະ, ແລະ ອາມາສາລູກຊາຍຂອງເຢເທີ,
ຜູ້ທີ່ເຂົາໄດ້ຂ້າໄປ. ເຂົາໄດ້ເຮັດໃຫ້ເລືອດແຫ່ງສົງຄາມໃນຍາມສະຫງົບສຸກ ແລະ ເຂົາເຮັດໃຫ້ເລືອດແຫ່ງສົງຄາມຕົກລົງເທິງສາຍເອວຂອງເຂົາ
ແລະລົງເທິງເກີບທີ່ຢູ່ຕີນຂອງເຂົາ.[6]ຈັດການກັບໂຢອາບດ້ວຍສະຕິປັນຍາທີ່ເຈົ້າໄດ້ຮຽນຮູ້ມາ,
ແຕ່ຢ່າປ່ອຍໃຫ້ຫົວຂອງເຂົາຕົກລົງໄປສູ່ຂຸມຝັງສົບຢ່າງສະຫງົບສຸກ.
[7]ຢ່າງໃດກໍດີ, ຈົ່ງສະແດງຄວາມເມດຕາຕໍ່ລູກຊາຍທັງຫລາຍຂອງບາກຊີນໄລຄົນກີເລອາດ, ແລະ
ຈົ່ງໃຫ້ພວກເຂົາຢູ່ໃນຫມູ່ຄົນທີ່ກິນອາຫານທີ່ໂຕະຂອງເຈົ້າ, ເພາະເມື່ອເຮົາຫນີອັບຊາໂລມອ້າຍຂອງເຈົ້ານັ້ນ ເຂົາທັງຫລາຍໄດ້ຊ່ວຍເຮົາໄວ້.
[8]ເບິ່ງແມ, ຍັງມີຊີເມອີລູກຊາຍຂອງເກຣາ, ຊາວເບັນຢາມິນຈາກບ້ານບາຮູຣິມກໍ່ຢູ່ກັບເຈົ້າ,
ເຂົາເປັນຄົນທີ່ປ້ອຍດ່າເຮົາດ້ວຍຖ້ອຍຄໍາທີ່ເຈັບແສບຫລາຍ ໃນມື້ທີ່ເຮົາໄດ້ເດີນທາງໄປຍັງມາຫະນາອິມ.
ຊີເມອີໄດ້ລົງມາຕ້ອນຮັບເຮົາທີ່ແມ່ນໍ້າຈໍແດນ, ແລະ ເຮົາຈຶ່ງໄດ້ສາບານຕໍ່ເຂົາໃນພຣະນາມພຣະເຈົ້າຢາເວວ່າ,
"ເຮົາຈະບໍ່ປະຫານຊີວິດເຈົ້າດ້ວຍດາບ."[9]ບັດນີ້ ເຈົ້າຢ່າຖືວ່າເຂົາບໍ່ມີໂທດ. ເຈົ້າເປັນຄົນມີປັນຍາ, ແລະ ເຈົ້າຈະຮູ້ວ່າຄວນຈະເຮັດຫຍັງກັບເຂົາ.
ເຈົ້າຈົ່ງນໍາຫົວຂອງເຂົາລົງໄປສູ່ຂຸມຝັງສົບພ້ອມກັບເລືອດເທີນ."
[10]ແລ້ວດາວິດໄດ້ຊີ້ງລ່ວງລັບໄປຢູ່ກັບບັນພະບູລຸດຂອງທ່ານ ແລະ ໄດ້ຝັງສົບໄວ້ໃນນະຄອນດາວິດ.[11]ເວລາທີ່ດາວິດໄດ້ປົກຄອງອິດສະຣາເອນຄື
ສີ່ສິບປີ. ທ່ານໄດ້ຊີ້ງຄອງຣາດໃນເຮັບໂຣນເຈັດປີ ແລະ ໃນນະຄອນເຢຣູຊາເລັມອີກສາມສິບສາມປີ.
[12]ຈາກນັ້ນໂຊໂລໂມນຈຶ່ງໄດ້ຂຶ້ນເປັນກະສັດສືບແທນດາວິດພໍ່ຂອງຕົນ, ແລະ ອໍານາດໃນຕໍາແຫນ່ງກະສັດຂອງເພິ່ນກໍດໍາລົງຢູ່ຢ່າງຫມັ້ນຄົງ.
[13]ແລ້ວອາໂດນີຢາລູກຊາຍຂອງນາງຮັກກິດ ໄດ້ໄປຫາບັດເຊບາ ແມ່ຂອງກະສັດໂຊໂລໂມນ. ເພິ່ນຖາມວ່າ, "ເຈົ້າມາຢ່າງເປັນມິດບໍ?
"ທ່ານໄດ້ຕອບວ່າ, "ແມ່ນແລ້ວ."[14]ແລ້ວທ່ານໄດ້ເວົ້າອີກວ່າ, "ຂ້ອຍມີເລື່ອງຢາກຖາມເຈົ້າບາງຢ່າງແນ່ໄດ້ບໍ່." ຣາຊີນີຖາມວ່າ
"ຖາມມາເທີດ."[15]ອາໂດນີຢາໄດ້ຕອບວ່າ, "ເຈົ້າຄົງຮູ້ແລ້ວວ່າຂ້ອຍຄວນຈະເປັນກະສັດ,
ແລະຄົນອິດສະຣາເອນທັງຫມົດກໍຄິດວ່າຂ້ອຍຈະໄດ້ເປັນກະສັດ. ແຕ່ພັດກາຍເປັນວ່ານ້ອງຊາຍຂອງຂ້ອຍໄດ້ຂຶ້ນເປັນກະສັດ,
ເພາະຄວາມປະສົງຂອງພຣະຢາເວ.
[16]ບັດນີ້ຂ້ອຍມີຄໍາຂໍຮ້ອງແຕ່ສິ່ງດຽວ, ແລະຂໍຢ່າໄດ້ປະຕິເສດຫັນຫນ້າຫນີເລີຍ." ຣາຊີນີບັດເຊບາຖາມວ່າ, "ກ່າວມາເຈົ້າຕ້ອງການຫຍັງ
"[17]ລາວຕອບວ່າ, "ກະຣຸນາເວົ້ານໍາກະສັດໂຊໂລໂມນ, ເພາະກະສັດຄືຈະບໍ່ປະຕິເສດຣາຊີນີ,
ເພື່ອທີ່ວ່າທ່ານຈະໄດ້ປະທານເອົານາງອາບີຊາກຊາວຊູເນມໃຫ້ເປັນເມຍຂອງຂ້ອຍ."[18]ບັດເຊບາຕອບວ່າ, "ດີແລ້ວ,
ຂ້ອຍຈະຖາມກະສັດໃຫ້ເຈົ້າ."
[19]ບັດເຊບາຈຶ່ງໄດ້ໄປຖາມກະສັດໂຊໂລໂມນໃຫ້ອາໂດນີຢາ. ກະສັດໄດ້ລຸກຂຶ້ນຕ້ອນຮັບຣາຊີນີ ແລະ ກົ້ມກາບເພິ່ນ.
ແລ້ວເພິ່ນກໍໄດ້ນັ່ງເທິງບັນລັງຂອງເພິ່ນ ແລະ ສັ່ງໃຫ້ຄົນໄປເອົາຕັ່ງມາໃຫ້ແມ່ນັ່ງເບື້ອງຂວາຂອງຕົນ.[20]ຣາຊີນີໄດ້ກ່າວວ່າ
"ແມ່ຈະຂໍສິ່ງນ້ອຍໆພຽງສິ່ງຫນຶ່ງຈາກລູກ, ຢ່າປະຕິເສດແມ່ເລຍ." ກະສັດຖາມເພິ່ນວ່າ, "ແມ່, ຢາກຂໍຫຍັງ?
ລູກຈະບໍ່ປະຕິເສດແມ່ດອກ."[21]ນາງຕອບວ່າ, "ແມ່ຂໍລູກຍົກນາງອາບີຊາກຊາວຊູເນມໃຫ້ເປັນເມຍຂອງອາໂດນີຢາ ອ້າຍຂອງລູກເຖີດ "
[22]ກະສັດໂຊໂລໂມນໄດ້ຕອບ ແລະ ໄດ້ຖາມແມ່ຂອງເພິ່ນຄືນວ່າ, "ເປັນຫຍັງແມ່ຈຶ່ງຂໍຮ້ອງລູກຍົກນາງອາບີຊາກຊາວຊູເນມໃຫ້ອາໂດນີຢາ?
ເປັນຫຍັງແມ່ຄືບໍ່ຂໍລູກໃຫ້ຍົກບັນລັງໃຫ້ລາວເລີຍ, ເພາະເຂົາເປັນອ້າຍຂອງລູກ ແລະ ຂໍອີກທັງປະໂຣຫິດອາບີອາທາ,
ແລະໂຢອາບລູກຊາຍຂອງນາງເຊຣູອີຢານໍາ?"[23]ແລ້ວກະສັດໂຊໂລໂມນໄດ້ສາບານໃນພຣະນາມຂອງພຣະຢາເວວ່າ,
"ຖ້າຂ້ານ້ອຍບໍ່ຂ້າອາໂດນີຢາຍ້ອນລາວກ້າຂໍຮ້ອງຢ່າງນີ້, ກໍຂໍໃຫ້ພຣະເຈົ້າຊົງລົງໂທດແລະ ລົງໂທດໃຫ້ຫນັກຍິ່ງຂຶ້ນ.
[24]ບັດນີ້ ພຣະຢາເວອົງຊົງຊີວິດຢູ່, ຜູ້ຊົງໄດ້ແຕ່ງຕັ້ງຂ້ານ້ອຍໃຫ້ນັ່ງຢູ່ເທິງບັນລັງຂອງດາວິດພໍ່ຂອງຂ້ານ້ອຍ, ແລະ
ເປັນຜູ້ຊົງໃຫ້ຂ້ານ້ອຍມີລູກຫລານດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້, ຢ່າງແນ່ນອນ
ສະນັ້ນອາໂດນີຢາຈະຕ້ອງຕາຍໃນວັນນີ້."[25]ດັ່ງນັ້ນກະສັດໂຊໂລໂມນຈຶ່ງໄດ້ສັ່ງເບນາອີຢາລູກຊາຍຂອງເຢໂຮຍອາດາໄປຫາ ແລະ ຂ້າອາໂດນີຢາ.
[26]ສ່ວນອາບີອາທາປະໂຣຫິດນັ້ນ ກະສັດໄດ້ກ່າວວ່າ, "ຈົ່ງໄປຢູ່ເມືອງອານາທົດ, ໄປສູ່ໄຮ່ນາຂອງເຈົ້າ. ເຈົ້າສົມຄວນຈະຕາຍ,
ແຕ່ໃນເວລານີ້ເຮົາຈະບໍ່ຂ້າເຈົ້າ, ເພາະວ່າເຈົ້າໄດ້ຫາມຫີບຂອງພຣະຢາເວອົງເຈົ້ານາຍ ໄປທາງຫນ້າຂອງດາວິດພໍ່ຂອງເຮົາ ແລະ
ເພາະເຈົ້າໄດ້ຮ່ວມທຸກຮ່ວມສຸກທຸກຢ່າງກັບຄວາມທຸກຂອງພໍ່ຂອງເຮົາ."[27]ດັ່ງນັ້ນ
ໂຊໂລໂມນໄດ້ຂັບໄລ່ອາບີອາທາຈາກຫນ້າທີ່ປະໂຣຫິດຂອງພຣະຢາເວ, ຈຶ່ງເຮັດໃຫ້ສໍາເລັດຕາມພຣະວັດຈະນະຂອງພຣະຢາເວ
ຊຶ່ງພຣະອົງໄດ້ກ່າວກ່ຽວກັບເຊື້ອສາຍຂອງເອລີທີ່ເມືອງຊີໂລ.
[28]ເມື່ອຂ່າວນີ້ໄປຮອດໂຢອາບ, ເຖິງແມ່ນວ່າໂຢອາບບໍ່ໄດ້ເຂົ້າຂ້າງອັບຊາໂລມ. ແຕ່ທ່ານໄດ້ເຂົ້າຂ້າງອາໂດນີຢາ
ດັ່ງນັ້ນໂຢອາບຈຶ່ງໄດ້ຫນີໄປທີ່ເຕັນຂອງພຣະຢາເວ ແລະ ຈັບແກຂອງແທ່ນບູຊາໄວ້.[29]ມີຄົນໄດ້ໄປບອກກະສັດໂຊໂລໂມນວ່າ

ໂຢອາບໄດ້ຫນີເຂົ້າໄປໃນເຕັນຂອງພຣະຢາເວ ແລະ ບັດນີ້ເຂົາໄດ້ຢູ່ຂ້າງແທ່ນບູຊາ.
ແລ້ວດັ່ງນັ້ນໂຊໂລໂມນໄດ້ສົ່ງເບນາອີຢາລູກຊາຍຂອງເຢໂຮຍອາດາ, ໄດ້ກ່າວວ່າ, "ຈົ່ງໄປ, ຂ້າໂຢອາບ."
30ດັ່ງນັ້ນເບນາອີຢາກໍໄດ້ມາເຕັນຂອງພຣະຢາເວ ແລະ ໄດ້ເວົ້າກັບເຂົາວ່າ, "ກະສັດສັ່ງເຈົ້າໃຫ້ອອກມາ." ໂຢອາບໄດ້ຕອບວ່າ, "ບໍ່ອອກ,
ຂ້ອຍຈະຕາຍຢູ່ທີ່ນີ້." ແລ້ວເບນາອີຢາກໍໄດ້ກັບໄປຫາກະສັດ, ແລະ ບອກວ່າ,
"ໂຢອາບເຂົາໄດ້ເວົ້າວ່າເຂົາຕ້ອງການທີ່ຈະຕາຍທີ່ແທ່ນບູຊາ."31ກະສັດໄດ້ກ່າວຕອບເຂົາວ່າ, "ຈົ່ງເຮັດຕາມທີ່ເຂົາເວົ້າ. ຂ້າເຂົາ ແລະ ຝັງເຂົາໄວ້
ເຈົ້າຈະໄດ້ເອົາໂທດຄວາມຜິດ ຊຶ່ງໂຢອາບໄດ້ຂ້າຄົນທີ່ບໍ່ມີຄວາມຜິດນັ້ນໄປຈາກເຮົາ ແລະ ຈາກເຊື້ອສາຍພໍ່ຂອງເຮົາ.
32ຂໍພຣະຢາເວຊົງນຳເລືອດຂອງເຂົາກັບມາຕົກເທິງຫົວຂອງເຂົາເອງ, ເພາະວ່າເຂົາໄດ້ຂ້າຊາຍສອງຄົນທີ່ຊອບທຳກວ່າ ແລະ
ດີກ່ວາຕົວເຂົາດ້ວຍດາບ, ຄືອັບເນລູກຊາຍຂອງເນຣະ, ຜູ້ບັນຊາການກອງທັບແຫ່ງອິດສະຣາເອນ, ແລະ ອາມາສາລູກຊາຍຂອງເຢເທີ,
ຜູ້ບັນຊາການກອງທັບແຫ່ງຢູດາຍ, ໂດຍທີ່ດາວິດພໍ່ຂອງເຮົາບໍ່ຮູ້ເລື່ອງ.33ດັ່ງນັ້ນ ຂໍໃຫ້ເລືອດຂອງພວກເຂົາໄດ້ຕົກລົງເທິງຫົວຂອງໂຢອາບ ແລະ
ເຊື້ອສາຍຂອງເຂົາຕ້ອງຮັບຜິດຊອບຕະຫລອດໄປ. ແຕ່ດາວິດ ແລະ ເຊື້ອສາຍຂອງເພິ່ນ ແລະ ລູກຫລານຂອງເພິ່ນ ແລະ ບັງລັງຂອງເພິ່ນ,
ຈະມີຄວາມສຸກຈາກພຣະຢາເວຢູ່ຕະຫລອດໄປ."
34ແລ້ວເບນາອີຢາລູກຊາຍຂອງເຢໂຮຍອາດາກໍໄດ້ເຂົ້າໄປ ແລະ ໄດ້ຂ້າໂຢອາບ.
ເຂົາໄດ້ຝັງສົບໄວ້ໃນບ້ານຂອງໂຢອາບເອງຊຶ່ງຢູ່ໃນຖິ່ນແຫ້ງແລ້ງກັນດານ.
35ກະສັດໄດ້ຊົງແຕ່ງຕັ້ງເບນາອີຢາລູກຊາຍຂອງເຢໂຮຍອາດາໃຫ້ເປັນຜູ້ບັນຊາການກອງທັບແທນໂຢອາບ, ແລະ
ກະສັດກໍໄດ້ຊົງແຕ່ງຕັ້ງຊາດົກປະໂຣຫິດແທນທີ່ອາບີອາທາ.
36ແລ້ວກະສັດໄດ້ຊົງໃຊ້ຄົນໄປ ແລະ ເອີ້ນຊີເມອີໃຫ້ມາຫາ ແລະ ໄດ້ກ່າວກັບເຂົາວ່າ, "ຈົ່ງສ້າງບ້ານຢູ່ໃນນະຄອນເຢຣູຊາເລັມ ແລະ
ອາໄສຢູ່ທີ່ນັ້ນ, ແລະ ຢ່າຍ້າຍອອກຈາກທີ່ນັ້ນໄປທີ່ອື່ນອື່ນໆ.37ເພາະໃນມື້ທີ່ເຈົ້າອອກໄປ, ແລະ ຂ້າມນ້ຳກິດໂຣນ, ເຈົ້າຮູ້ໄວ້ເຖີດວ່າ
ເຈົ້າຈະຕ້ອງຕາຍ ແລ້ວເລືອດຂອງເຈົ້າຈະຕ້ອງຕົກເທິງຫົວຂອງເຈົ້າເອງ."38ດັ່ງນັ້ນ ຊີເມອີຕອບວ່າ, "ທີ່ກະສັດກ່າວມານັ້ນແມ່ນດີແລ້ວ.
ຜູ້ຮັບໃຊ້ຈະເຮັດຕາມທີ່ກະສັດຜູ້ເຈົ້ານາຍຂອງຂ້ານ້ອຍກ່າວນັ້ນ." ດັ່ງນັ້ນ ຊີເມອີຈຶ່ງໄດ້ອາໄສຢູ່ໃນນະຄອນເຢຣູຊາເລັມເປັນເວລາດົນນານ.
39ແຕ່ເມື່ອສິ້ນສຸດປີທີສາມ, ທາດສອງຄົນຂອງຊີເມອີໄດ້ຫລົບຫນີໄປຫາອາກີເຊລູກຊາຍຂອງມາອາກາ, ກະສັດເມືອງກາດ.
ດັ່ງນັ້ນພວກເຂົາໄດ້ມາບອກຊີເມອີ, ແລະ ເວົ້າວ່າ, "ເບິ່ງແມ, ທາດຂອງທ່ານຢູ່ໃນເມືອງກາດ."40ແລ້ວຊີເມອີກໍໄດ້ລຸກຂຶ້ນ, ມັດອານຂີລາ ແລະ
ໄປຫາອາກີເຊທີ່ເມືອງກາດ ເພື່ອຊອກຫາທາດຂອງຕົນ. ເຂົາໄດ້ໄປນຳທາດຂອງເຂົາມາຈາກເມືອງກາດ.
41ເມື່ອມີຄົນໄດ້ມາບອກໂຊໂລໂມນວ່າ ຊີເມອີໄດ້ອອກຈາກນະຄອນເຢຣູຊາເລັມໄປເມືອງກາດ ແລະ ໄດ້ກັບມາແລ້ວ,
42ກະສັດຈຶ່ງໄດ້ຊົງໃຊ້ຄົນໄປເອີ້ນຊີເມອີມາຫາ ແລະ ໄດ້ກ່າວກັບເຂົາວ່າ, "ເຮົາໄດ້ໃຫ້ເຈົ້າສາບານໃນພຣະນາມຂອງພຣະຢາເວບໍ່ແມ່ນບໍ ແລະ
ແຈ້ງແກ່ເຈົ້າແລ້ວວ່າ, "ຈົ່ງຮູ້ວ່າ ໃນວັນທີ່ເຈົ້າອອກໄປ ບໍ່ວ່າຈະໄປທີ່ໃດ ເຈົ້າຈະຕ້ອງຕາຍແທ້"? ແລ້ວເຈົ້າກໍໄດ້ຕອບເຮົາວ່າ
"ທີ່ກະສັດນັ້ນກ່າວກໍດີແລ້ວ."
43ເຫດໃດເຈົ້າຈຶ່ງບໍ່ໄດ້ຮັກສາຄຳສາບານທີ່ໃຫ້ໄວ້ຕໍ່ພຣະຢາເວ ແລະ
ບໍ່ຮັກສາຄຳສັ່ງຂອງເຮົາທີ່ໃຫ້ກັບເຈົ້ານັ້ນ?"44ກະສັດຍັງໄດ້ກ່າວກັບຊີເມອີວ່າ, "ໃນໃຈຂອງເຈົ້າເອງຮູ້ເລື່ອງເຫດຮ້າຍທັງຫມົດ
ຊຶ່ງເຈົ້າໄດ້ເຮັດຕໍ່ດາວິດພໍ່ຂອງເຮົາ. ເພາະສະນັ້ນພຣະຢາເວຈະຊົງນຳເອົາເຫດຮ້າຍມາສະຫນອງເທິງຫົວຂອງເຈົ້າເອງ.
45ແຕ່ກະສັດໂຊໂລໂມນຈະໄດ້ຮັບພຣະພອນ ແລະ
ບັນລັງຂອງດາວິດຈະຕັ້ງຫມັ້ນຄົງຕໍ່ຫນ້າພຣະຢາເວຕະຫລອດໄປ."46ແລ້ວກະສັດໄດ້ຊົງໄດ້ສັ່ງໃຫ້ເບນາອີຢາລູກຊາຍຂອງເຢໂຮຍອາດາເຂົາກໍໄດ້ອອກໄປຂ້າຊີເມອີ
ດັ່ງນັ້ນການປົກຄອງກໍໄດ້ຈັດຕັ້ງຢ່າງດີ. ກະສັດໂຊໂລໂມນໄດ້ຄວບຄຸມອຳນາດທັງຫມົດເປັນທີ່ສຳເລັດ.

# 3

1ໂຊໂລໂມນໄດ້ເຮັດໃຫ້ເປັນພັນທະມິດກັນກັບກະສັດແຫ່ງເອຢິບ. ໂດຍການແຕ່ງງານກັບລູກສາວຂອງເພິ່ນ ແລະ
ຊຶ່ງໄດ້ພານາງມານະຄອນດາວິດ ຈົນເພິ່ນໄດ້ສ້າງຣາຊວັງວິຫານ, ຂອງພຣະຢາເວ, ແລະ ກຳແພງລ້ອມນະຄອນເຢຣູຊາເລັມສຳເລັດ.
2ປະຊາຊົນໄດ້ຖວາຍເຄື່ອງບູຊາຕາມສະຖານບູຊາເທິງທີ່ສູງຕ່າງໆ, ເພາະຍັງບໍ່ໄດ້ສ້າງວິຫານເພື່ອພຣະນາມຂອງພຣະຢາເວ.
3ໂຊໂລໂມນໄດ້ສະແດງອອກເຖິງຄວາມຮັກຂອງເພິ່ນມີຕໍ່ພຣະຢາເວ ຊຶ່ງດຳເນີນຕາມກົດເກນຂອງດາວິດພໍ່ຂອງຕົນ,
ຍິ່ງໄປກ່ວານັ້ນເພິ່ນຍັງໄດ້ຊົງຖວາຍເຄື່ອງບູຊາ ແລະ ເຜົາເຄື່ອງບູຊາທີ່ສະຖານສູງ.

4ກະສັດໄດ້ໄປທີ່ເມືອງກິເບໂອນເພື່ອຖວາຍເຄື່ອງບູຊາບ່ອນນັ້ນ, ເພາະບ່ອນນັ້ນເປັນສະຖານສູງທີ່ສຳຄັນຫລາຍ.
ໂຊໂລໂມນໄດ້ຖວາຍເຄື່ອງເຜົາບູຊາຈຳນວນເປັນພັນໆເທື່ອເທິງແທ່ນບູຊານັ້ນ.
5ພຣະຢາເວໄດ້ຊົງປາກົດແກ່ໂຊໂລໂມນທີ່ເມືອງກິເບໂອນທາງຄວາມຝັນໃນຍາມຄ່ຳຄືນ; ແລະ ພຣະອົງໄດ້ກ່າວວ່າ "ຈົ່ງຂໍ!
ເຈົ້າຢາກໃຫ້ເຮົາໃຫ້ອັນໃດເຈົ້າກໍຈົ່ງຂໍເທີນ?"
6ດັ່ງນັ້ນ ໂຊໂລໂມນໄດ້ຕອບວ່າ, "ພຣະອົງຊົງສຳແດງຄວາມຫມັ້ນຄົງໃນພັນທະສັນຍາອັນຍິ່ງໃຫຍ່ແກ່ດາວິດພໍ່ຂອງຂ້ານ້ອຍ,
ຜູ້ຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງ, ເພາະວ່າທ່ານໄດ້ດຳເນີນດ້ວຍຄວາມຊື່ສັດ, ດ້ວຍຄວາມຊອບທຳ, ແລະ ດ້ວຍຈິດໃຈຊື່ຕົງຕໍ່ພຣະອົງ, ແລະ
ພຣະອົງໄດ້ຊົງຮັກສາຄວາມຫມັ້ນຄົງໃນພັນທະສັນຍາອັນຍິ່ງໃຫຍ່ນີ້ໄວ້ເພື່ອທ່ານ ແລະ
ໄດ້ປະທານລູກຊາຍຄົນຫນຶ່ງແກ່ທ່ານນັ່ງເທິງບັນລັງຂອງທ່ານໃນມື້ນີ້.
7ບັດນີ້ ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ພຣະອົງຊົງເຮັດໃຫ້ຜູ້ຮັບໃຊ້ຂອງພຣະອົງເປັນກະສັດແທນດາວິດພໍ່ຂອງຂ້ານ້ອຍ,
ເຖິງແມ່ນວ່າຂ້ານ້ອຍເປັນພຽງເດັກນ້ອຍ. ຂ້ານ້ອຍບໍ່ຮູ້ວ່າຊິເຮັດຢ່າງໃດດີ. 8ຜູ້ຮັບໃຊ້ຂອງພຣະອົງກໍຢູ່ທ່າມກາງປະຊາຊົນຂອງພຣະອົງ,
ຜູ້ຊຶ່ງພຣະອົງຊົງເລືອກໄວ້ ເປັນຊົນຊາດໃຫຍ່, ຊຶ່ງບໍ່ສາມາດຈະນັບໄດ້.
9ສະນັ້ນຂໍພຣະອົງປະທານຈິດໃຈທີ່ເຂົ້າໃຈຕໍ່ຜູ້ຮັບໃຊ້ຂອງພຣະອົງເພື່ອທີ່ຈະປົກຄອງປະຊາຊົນຂອງພຣະອົງຢ່າງຍຸດຕິທຳ,
ເພື່ອຈະແຍກຄວາມແຕກຕ່າງລະວ່າງດີກັບຊົ່ວໄດ້. ເພາະໃຜຈະສາມາດພິພາກສາປະຊາຊົນຫລວງຫລາຍນີ້ຂອງພຣະອົງໄດ້?"
10ທີ່ໂຊໂລໂມນໄດ້ຂໍເຊັ່ນນີ້ກໍເປັນທີ່ພໍໃຈອົງພຣະຜູ້ເປັນເຈົ້າ. 11ດັ່ງນັ້ນພຣະເຈົ້າຈຶ່ງໄດ້ກ່າວກັບທ່ານວ່າ, "ເພາະເຈົ້າໄດ້ຂໍສິ່ງນີ້ ແລະ
ບໍ່ໄດ້ຂໍຊີວິດຍືນຍາວ ຫລື ຄວາມຮັ່ງມີໃຫ້ຕົນເອງ ຫລື ຂໍຊີວິດສັດຕູຂອງເຈົ້າ,
ແຕ່ເຈົ້າເອງໄດ້ຂໍຄວາມສາມາດແຍກແຍະເພື່ອຈະເຂົ້າໃຈຄວາມຍຸດຕິທຳ, 12ບັດນີ້, ເຮົາຈະເຮັດຕາມຄຳທີ່ເຈົ້າໄດ້ຂໍເຮົາ.
ເຮົາຈະໃຫ້ໃຈທີ່ປະກອບດ້ວຍປັນຍາແລະ ຄວາມເຂົ້າໃຈ, ເພາະວ່າຈະບໍ່ມີໃຜທີ່ເປັນຢູ່ກ່ອນເຈົ້າຫລັງຈາກເຈົ້າ, ແລະ
ຈະບໍ່ມີໃຜທີ່ຂຶ້ນມານຳຫລັງເຈົ້າຕໍ່ຈາກເຈົ້າ.
13ເຮົາຍັງຈະໃຫ້ເຈົ້າໃນສິ່ງທີ່ເຈົ້າບໍ່ໄດ້ຂໍດ້ວຍ, ຄວາມຮັ່ງມີ ແລະ ກຽດຕິຍົດ,
ເພື່ອຈະບໍ່ມີກະສັດອົງໃດປຽບທຽບກັບເຈົ້າໄດ້ຕະຫລອດທັງເວລາທັງຫມົດຂອງເຈົ້າ. 14ຖ້າເຈົ້າຈະດຳເນີນຕາມທາງຂອງເຮົາ ຮັກສາກົດເກນ
ແລະພຣະບັນຍັດຂອງເຮົາ, ແບບດາວິດພໍ່ຂອງເຈົ້າໄດ້ດຳເນີນນັ້ນ, ແລ້ວເຮົາກໍຈະໃຫ້ອາຍຸຂອງເຈົ້າຍືນຍາວ."
15ແລ້ວໂຊໂລໂມນກໍໄດ້ຕື່ນຈາກນອນ, ແລະນີ້ແຫລະ ເປັນຄວາມຝັນ. ທ່ານກໍໄດ້ສະເດັດມານະຄອນເຢຣູຊາເລັມ ແລະ
ໄດ້ຢືນຢູ່ຫນ້າຫີບພັນທະສັນຍາຂອງອົງພຣະຜູ້ເປັນເຈົ້າ. ທ່ານໄດ້ຖວາຍເຄື່ອງເຜົາບູຊາ ແລະ ເຄື່ອງບູຊາ, ແລະ
ໄດ້ຈັດງານລ້ຽງແກ່ຂ້າຣາຊການທຸກຄົນຂອງເພິ່ນ.
16ແລ້ວຍິງໂສເພນີສອງຄົນໄດ້ມາຫາກະສັດໂຊໂລໂມນ ແລະ ໄດ້ຢືນຢູ່ຕໍ່ຫນ້າທ່ານ. 17ຍິງຄົນຫນຶ່ງໄດ້ເວົ້າວ່າ, "ເຈົ້ານາຍຂອງຂ້ານ້ອຍ, ຜູ້ຍິງຄົນນີ້
ແລະ ຂ້ານ້ອຍໄດ້ອາໄສຢູ່ບ້ານຫລັງດຽວກັນ, ແລະ ຂ້ານ້ອຍກໍເກີດລູກຊາຍຂອງຄົນຫນຶ່ງ ຂະນະທີ່ນາງກໍຢູ່ໃນບ້ານ.
18ເລື່ອງນີ້ເກີດຂຶ້ນໃນວັນທີສາມເມື່ອຂ້ານ້ອຍເກີດລູກແລ້ວ ແລະ ຍິງຄົນນີ້ກໍໄດ້ເກີດລູກດ້ວຍ. ພວກຂ້ານ້ອຍໄດ້ຢູ່ນຳກັນ.
ບໍ່ມີໃຜຢູ່ກັບພວກຂ້ານ້ອຍໃນບ້ານນັ້ນເລີຍ, ພຽງແຕ່ພວກຂ້ານ້ອຍທັງສອງເທົ່ານັ້ນຢູ່ໃນບ້ານນັ້ນ.
19ແລ້ວລູກຊາຍຂອງຍິງຄົນນີ້ໄດ້ຕາຍແລ້ວໃນເວລາກາງຄືນ, ເພາະນາງນອນທັບເຂົາ. 20ດັ່ງນັ້ນໃນຕອນກາງຄືນນາງໄດ້ລຸກຂຶ້ນ ແລະ
ໄດ້ເອົາລູກຊາຍຂອງຂ້ານ້ອຍໄປຈາກຂ້າງກາຍຂ້ານ້ອຍ, ໃນຂະນະທີ່ສາວໃຊ້ຂອງທ່ານໄດ້ນອນຫລັບຢູ່, ແລະ ໄດ້ວາງເຂົາໄວ້ໃນເອິກຂອງນາງ,
ແລະ ນາງໄດ້ເອົາລູກຊາຍຂອງນາງທີ່ຕາຍແລ້ວນັ້ນໄວ້ໃນເອິກຂອງຂ້ານ້ອຍ.
21ເມື່ອຂ້ານ້ອຍໄດ້ຕື່ນຂຶ້ນໃນຕອນເຊົ້າ ເພື່ອໃຫ້ລູກຂອງຂ້ານ້ອຍກິນນົມ, ເຂົາໄດ້ຕາຍແລ້ວ ແຕ່ເມື່ອຂ້ານ້ອຍໄດ້ຄິດເບິ່ງໃນຕອນເຊົ້າ,
ເດັກນັ້ນບໍ່ແມ່ນລູກຊາຍທີ່ຂ້ານ້ອຍໄດ້ເກີດອອກມາ." 22ແຕ່ແລ້ວຍິງອີກຄົນຫນຶ່ງໄດ້ເວົ້າວ່າ, "ບໍ່ແມ່ນ, ເດັກທີ່ມີຊີວິດເປັນລູກຂອງລາວ,
ສ່ວນເດັກທີ່ຕາຍໄປເປັນລູກຂອງຂ້ານ້ອຍ." ຍິງຄົນທີຫນຶ່ງໄດ້ເວົ້າວ່າ, "ບໍ່, ເດັກທີ່ຕາຍເປັນລູກຂອງເຈົ້າ ແລະ
ເດັກທີ່ມີຊີວິດຢູ່ເປັນລູກຂອງຂ້ອຍ." ນີ້ເປັນວິທີທີ່ພວກນາງໄດ້ຖຽງກັນຕໍ່ຫນ້າກະສັດ.
23ແລ້ວກະສັດໄດ້ກ່າວວ່າ, "ຄົນຫນຶ່ງເວົ້າວ່າ, 'ເດັກທີ່ມີຊີວິດຢູ່ນີ້ເປັນລູກຊາຍຂອງຂ້ອຍ, ແລະ ສ່ວນລູກຊາຍຂອງເຈົ້າຕາຍແລ້ວ,' ແລະ
ອີກຄົນຫນຶ່ງເວົ້າວ່າ, 'ບໍ່ແມ່ນ, ລູກຊາຍຂອງເຈົ້າຕາຍແລ້ວ, ແລະ ລູກຊາຍຂອງຂ້ອຍຍັງມີຊີວິດຢູ່.'" 24ກະສັດໄດ້ກ່າວວ່າ,
"ຈົ່ງເອົາດາບມາໃຫ້ເຮົາເຫລັ້ມຫນຶ່ງ." ພວກເຂົາຈຶ່ງໄດ້ນຳດາບມາໄວ້ຕໍ່ຫນ້າກະສັດ. 25ແລ້ວກະສັດໄດ້ກ່າວວ່າ,
"ຈົ່ງແບ່ງເດັກທີ່ມີຊີວິດອອກເປັນສອງສ່ວນ, ແລະໃຫ້ຍິງຄົນຫນຶ່ງສ່ວນຫນຶ່ງ ແລະ ອີກຄົນຫນຶ່ງສ່ວນຫນຶ່ງ."
26ແລ້ວຍິງຄົນທີ່ລູກຊາຍຂອງຕົນຍັງມີຊີວິດຢູ່ນັ້ນໄດ້ຕອບກະສັດ, ເພາະວ່າຈິດໃຈເຕັມໄປດ້ວຍຄວາມອີ່ຕົນລູກຊາຍຂອງນາງ, ແລະ
ນາງຈຶ່ງໄດ້ເວົ້າວ່າ, "ເຈົ້ານາຍຂອງຂ້ານ້ອຍ, ຈົ່ງມອບເດັກທີ່ມີຊີວິດນັ້ນໃຫ້ນາງອີກຄົນຫນຶ່ງໄປ, ແລະຢ່າຂ້າເຂົາເລີຍ."
ແຕ່ຍິງອີກຄົນຫນຶ່ງໄດ້ເວົ້າວ່າ, "ຢ່າໃຫ້ເດັກນັ້ນເປັນຂອງຂ້ອຍຫລືຂອງເຈົ້າ ແຕ່ຈົ່ງແບ່ງເທີນ." 27ແລ້ວກະສັດໄດ້ຕອບວ່າ,
"ຈົ່ງໃຫ້ເດັກທີ່ມີຊີວິດນັ້ນແກ່ຍິງຄົນທຳອິດ ແລະຢ່າຂ້າເດັກເລີຍ ນາງເປັນແມ່ຂອງເດັກ
ຄົນນັ້ນ." 28ເມື່ອຄົນອິດສະຣາເອນທັງຫມົດໄດ້ຮູ້ເລື່ອງການພິພາກສາ ຊຶ່ງກະສັດໄດ້ຊົງພິພາກສານັ້ນ ເຂົາທັງຫລາຍກໍຢ້ານກົວກະສັດ
ເພາະເຂົາເຫັນວ່າ ປັນຍາຂອງພຣະເຈົ້າຢູ່ໃນທ່ານ ທີ່ຈະພິພາກສານັ້ນ.


generated on Tue Jun 17 19:01:42 2025

# 4

[1]ກະສັດໂຊໂລໂມນໄດ້ເປັນກະສັດຂອງຄົນອິດສະຣາເອນທັງຫມົດ.[2]ຕໍ່ໄປນີ້ເປັນບັນດາຂ້າຣາຊການຊັ້ນຜູ້ໃຫຍ່ຂອງເພິ່ນຄື: ອາຊາຣີຢາ
ລູກຊາຍຂອງຊາດົກໄດ້ເປັນປະໂຣຫິດ.[3]ເອລີໂຮເຣັບ ແລະ ອາຮີຢາ ລູກຊາຍຂອງຊີຊາ, ເປັນເລຂາທິການປະຈຳຣາຊວັງ.
ເຢໂຮຊາຟັດລູກຊາຍຂອງອາຮີລຸດເປັນຜູ້ບັນທຶກ.[4]ເບນາອີຢາ ລູກຊາຍຂອງເຢໂຮຍອາດາໄດ້ເປັນຜູ້ບັນຊາການກອງທັບ. ຊາດົກ ແລະ
ອາບີອາທາໄດ້ເປັນປະໂຣຫິດ.

[5]ອາຊາຣີຢາລູກຊາຍຂອງນາທານເປັນຫົວຫນ້າຜູ້ປົກຄອງແຂວງຕ່າງໆ. ຊາບຸດລູກຊາຍຂອງນາທານໄດ້ເປັນປະໂຣຫິດ ແລະ
ໄດ້ເປັນທີ່ປຶກສາຂອງກະສັດ.[6]ອາຮີຊາໄດ້ເປັນຜູ້ກຳກັບບັນດາຄົນຮັບໃຊ້ຢູ່ໃນວັງ ແລະ
ອາໂດນີຣາມລູກຊາຍຂອງອັບດາເປັນຜູ້ເບິ່ງແຍງຄົນງານຜູ້ທີ່ເປັນຄົນງານໂຢທາ.
[7]ໂຊໂລໂມນໄດ້ຊົງມີຜູ້ປົກຄອງແຂວງສິບສອງຄົນໄວ້ຢູ່ໃນປະເທດອິດສະຣາເອນທັງຫມົດ, ຜູ້ຊຶ່ງໄດ້ເປັນຜູ້ຈັດສະບຽງອາຫານສຳລັບກະສັດ ແລະ
ຄົວເຮືອນຂອງພຣະອົງ. ແຕ່ລະຄົນຕ້ອງໄດ້ຈັດຕຽມເດືອນຫນຶ່ງໃນຫນຶ່ງປີ.[8]ຕໍ່ໄປນີ້ເປັນຊື່ຂອງພວກເຂົາຄື: ເບນເຮີ,
ປະຈຳທີ່ເຂດເນີນພູເອຟຣາອິມ;[9]ເບັນເດເກ ປະຈຳທີ່ເມືອງມາກາດ, ຊາອານບິມ ເບັດເຊເມດ, ແລະເອໂລນເບັດຮານານ;[10]ເບັນເຮເສັດ,
ປະຈຳທີ່ເມືອງອາຣຸບໂບດ (ທີ່ຂຶ້ນກັບເຂົາມີ ໂສໂກ ແລະເຂດແດນເຮເຟທັງຫມົດ);
[11]ເບນາບີນາດາບ, ປະຈຳທີ່ເຂດເມືອງໂດເຣທັງຫມົດ (ທ່ານໄດ້ຕາຟາດລູກສາວຂອງໂຊໂລໂມນເປັນເມຍ);[12]ບາອານາ ລູກຊາຍຂອງອາຮີລູດ,
ປະຈຳທີ່ເມືອງຕາອານັກ ແລະເມກິດໂດ, ແລະ ເບັດເຊອານທັງຫມົດຊຶ່ງຢູ່ຂ້າງຊາເຣທານທີ່ຢູ່ໃຕ້ລົງໄປຈາກເມືອງຢິດຊະເຣນ,
ຕັ້ງແຕ່ເບັດເຊອານຮອດອາເບັນເມໂຮລາໄປຈົນຮອດອີກດ້ານຫນຶ່ງຂອງເມືອງໂຢກເນອາມ;[13]ເບັນເກເບ, ປະຈຳທີ່ເມືອງຣາໂມດກີເລອາດ
(ທີ່ຂຶ້ນກັບເຂົາມີຫມູ່ບ້ານຕ່າງໆ ຂອງຢາອີລູກຊາຍຂອງນາມາເຊ, ຊຶ່ງຢູ່ໃນກີເລອາດ, ແລະ ເຂົາໄດ້ມີອານາເຂດອັກໂກບຂຶ້ນກັບເຂົາ,
ຊຶ່ງຢູ່ໃນບາຊານ, ຄືເມືອງໃຫຍ່ຫົກສິບເມືອງຊຶ່ງມີກຳແພງເມືອງ ທັງມີກອນປະຕູເມືອງທີ່ເຮັດດ້ວຍທອງສຳຣິດ);[14]ອາຮີນາດັບລູກຊາຍຂອງອິດໂດ,
ປະຈຳທີ່ມະຫານາອິມ;
[15]ອາຮີມາອາດ, ປະຈຳທີ່ເນັບທາລີ (ທ່ານໄດ້ແຕ່ງງານກັບນາງບາເຊມາດ ລູກສາວອີກຄົນຫນຶ່ງຂອງກະສັດໂຊໂລໂມນ);
[16]ບາອານາລູກຊາຍຂອງຮູຊາຍ, ປະຈຳທີ່ເຂດອາເຊ ແລະເບອາໂລດ;[17]ເຢໂຮຊາຟັດລູກຊາຍຂອງປາຣູອາ, ປະຈຳທີ່ອິດຊາຄາ;
[18]ຊີເມອີລູກຊາຍຂອງເອລາ, ປະຈຳທີ່ເບັນຢາມິນ;[19]ແລະ ເກເບລູກຊາຍຂອງອູຣີ, ປະຈຳທີ່ແຜ່ນດິນກີເລອາດ,
ເມືອງຂອງສີໂຫນກະສັດຂອງຊາວອາໂມຣິດ ແລະ ຂອງໂອກກະສັດແຫ່ງບາຊານ, ມີຜູ້ກວດຣາຊການຄົນຫນຶ່ງທີ່ປະຈຳທີ່ແຜ່ນດິນນັ້ນ.
[20]ຄົນຢູດາ ແລະ ຄົນອິດສະຣາເອນນັ້ນໄດ້ມີຈຳນວນຫລວງຫລາຍຄືເມັດຊາຍຕາມແຄມຝັ່ງທະເລ. ເຂົາທັງຫລາຍໄດ້ກິນດື່ມ ແລະ
ໄດ້ມີຈິດໃຈເບີກບານ.[21]ໂຊໂລໂມນໄດ້ປົກຄອງທຸກອານາຈັກຕັ້ງແຕ່ແມ່ນ້ຳເອີຟຣັດໄປຈົນຮອດດິນແດນຂອງປະເທດເອຢິບ.
ພວກເຂົາທັງຫລາຍໄດ້ຖວາຍບັນນາການ ແລະ ໄດ້ຮັບໃຊ້ໂຊໂລໂມນຈົນຕະຫລອດຊີວິດຂອງທ່ານ.
[22]ສະບຽງອາຫານສຳລັບໂຊໂລໂມນໃນມື້ຫນຶ່ງນັ້ນ ຄື ແປ້ງລະອຽດຫົກໂຕນ, ແລະ ອາຫານສິບສອງໂຕນ,[23]ງົວຕຸ້ຍພີສິບໂຕ,
ງົວລ້ຽງຈາກທົ່ງນາຊາວໂຕ, ແກະຫນຶ່ງຮ້ອຍໂຕ, ນອກຈາກນີ້ມີ ກວາງ, ມັ່ງ, ໂອງ, ແລະ ໄກ່ໂຕອ້ວນພີ.
[24]ເພາະທ່ານໄດ້ຄອບຄອງທ້ອງຖິ່ນທັງຫມົດທາງທິດນີ້ຂອງແມ່ນ້ຳ, ຕັ້ງແຕ່ທິບສາໄປຈົນຮອດເມືອງກາຊາ,
ໄດ້ຄອບຄອງເຫນືອບັນດາກະສັດທີ່ຢູ່ທາງທິດນີ້ຂອງແມ່ນ້ຳ, ແລະ ທ່ານໄດ້ຊົງມີຄວາມສະຫງົບສຸກຢູ່ອ້ອມດ້ານຂອງທ່ານ.[25]ຢູດາ ແລະ
ອິດສະຣາເອນກໍໄດ້ຢູ່ຢ່າງປອດໄພ, ທຸກຄົນຕ່າງກໍມີສວນອະງຸ່ນ ແລະ ສວນຫມາກເດື່ອເທດເປັນຂອງຕົນເອງ, ຈາກດານໄປເຖິງເບເອເຊບາ,
ໃນທຸກວັນທັງຫມົດຂອງໂຊໂລໂມນ.
[26]ໂຊໂລໂມນໄດ້ມີຄອກມ້າສີ່ຫມື່ນຄອກສຳລັບລົດມ້າສຶກຂອງທ່ານ, ແລະ ມີທະຫານມ້າຫນຶ່ງຫມື່ນສອງພັນຄົນ.
[27]ພວກຜູ້ປົກຄອງສິບສອງຄົນກໍໄດ້ຈັດສະບຽງອາຫານແກ່ກະສັດໂຊໂລໂມນ ແລະ ທຸກຄົນທີ່ມາຍັງໂຕະອາຫານກະສັດໂຊໂລໂມນ,
ພວກເຂົາຕ່າງກໍໄດ້ຖວາຍສິ່ງຂອງຕາມເດືອນຂອງຕົນ ໂດຍບໍ່ໃຫ້ສິ່ງໃດບົກພ່ອງເລີຍ.[28]ພວກເຂົາໄດ້ນຳທັງເຂົ້າບາເລໄປຍັງສະຖານທີ່ຖືກຕ້ອງ
ແລະ ເມັດເຂົ້າພັນດີສຳລັບລົດມ້າ ແລະ ຂີ່ມ້າ, ແຕ່ລະຄົນໄດ້ນຳມາຕາມທີ່ເຂົາສາມາດເຮັດໄດ້.
[29]ພຣະເຈົ້າໄດ້ຊົງປະທານສະຕິປັນຍາ ແລະຄວາມເຂົ້າໃຈແກ່ໂຊໂລໂມນຫລາຍ, ແລະ ອີກທັງຄວາມຮອບຮູ້ທີ່ແຄມຝັ່ງທະເລ.
[30]ສະຕິປັນຍາໂຊໂລໂມນເຫນືອກວ່າສະຕິປັນຍາຊາວຕາເວັນອອກ ແລະ ສະຕິປັນຍາທັງຫມົດຂອງເອຢິບ.[31]ພ
ຣະອົງໄດ້ຊົງມີສະຕິປັນຍາຫລາຍກວ່າທຸກຄົນ - ຍິ່ງກວ່າຕະກູນເອທານ, ເຮມານ, ແລະ ຊາວດາກດາ, ລູກຊາຍທັງຫລາຍຂອງມາໂຮນ - ແລະ
ນາມຂອງພຣະອົງເລື່ອງລືໄປທຸກຊົນຊາດຢູ່ອ້ອມໆ.
[32]ພຣະອົງໄດ້ກ່າວສຸພາສິດສາມຂໍ້ ແລະ ບົດເພງຂອງພຣະອົງມີຫນຶ່ງພັນຫ້າບົດ.[33]ພະອົງໄດ້ຊົງບັນລະຍາຍເຖິງຕົ້ນໄມ້, ຕັ້ງແຕ່ຕົ້ນໄມ້
ແລະພືດຜັກຕ່າງໆຊຶ່ງງອກອອກມາຈາກກຳແພງ. ພະອົງໄດ້ອະທິບາຍເຖິງສັດຕ່າງໆ ບັນດານົກ ບັນດາສັດເລືອຄານ ແລະ ປາ.
[34]ປະຊາຊົນຈາກຊົນຊາດທັງຫລາຍກໍໄດ້ມາເພື່ອຢາກຟັງສະຕິປັນຍາຂອງໂຊໂລໂມນ.
ພວກເຂົາໄດ້ຕົວແທນຂອງບັນດາກະສັດແຫ່ງແຜ່ນດິນໂລກທັງປວງ ຜູ້ໄດ້ຍິນເຖິງສະຕິປັນຍາຂອງພະອົງ.


generated on Tue Jun 17 19:01:42 2025

# 5

[1]ຮີຣາມກະສັດເມືອງຕີເຣໄດ້ສົ່ງຜູ້ຮັບໃຊ້ຂອງທ່ານໄປຫາກະສັດໂຊໂລໂມນ ເມື່ອທ່ານໄດ້ຍິນວ່າ
ພວກເຂົາໄດ້ເຈີມໃຫ້ໂຊໂລໂມນຂຶ້ນເປັນກະສັດແທນພໍ່ຂອງເພິ່ນ; ເພາະຮີຣາມໄດ້ເປັນມິດທີ່ຮັກກັບກະສັດດາວິດຢູ່ເລື້ອຍໆ.
[2]ໂຊໂລໂມນໄດ້ສົ່ງຄໍາຕອບໄປບອກກະສັດຮີຣາມວ່າ, [3]"ທ່ານກໍຄົງຮູ້ຢູ່ແລ້ວວ່າ
ດາວິດພໍ່ຂອງຂ້າພະເຈົ້າບໍ່ຊົງສາມາດສ້າງພຣະວິຫານສໍາລັບພຣະນາມຂອງພຣະຢາເວພຣະເຈົ້າຂອງເພິ່ນໄດ້ ເພາະສົງຄາມອ້ອມຮອບເພິ່ນຢູ່,
ຈົນກວ່າພຣະຢາເວຈະຊົງໃຫ້ເພິ່ນຊະນະສັດຕູທັງຫລາຍຂອງເພິ່ນ.

[4]ແຕ່ບັດນີ້, ພຣະຢາເວພຣະເຈົ້າຂອງຂ້າພະເຈົ້າໄດ້ໃຫ້ຄວາມສະຫງົບສຸກແກ່ຊາຍແດນຂອງຂ້າພະເຈົ້າ. ສັດຕູກໍບໍ່ມີ ແລະ
ໂພຍໄພໃດໆກໍບໍ່ມາລົບກວນ. [5]ດັ່ງນັ້ນຂ້າພະເຈົ້າຈຶ່ງຕັດສິນໃຈສ້າງພຣະວິຫານສໍາລັບພຣະນາມຂອງພຣະຢາເວພຣະເຈົ້າຂອງຂ້າພະເຈົ້າ,
ດັ່ງທີ່ພຣະຢາເວໄດ້ກ່າວໄວ້ກັບດາວິດພໍ່ຂອງຂ້າພະເຈົ້າວ່າ, 'ລູກຊາຍຂອງເຈົ້າ, ຜູ້ທີ່ເຮົາຈະໃຫ້ຂຶ້ນເປັນກະສັດແທນເຈົ້ານັ້ນ
ຈະສ້າງພຣະວິຫານສໍາລັບນາມຂອງເຮົາ.'
[6]ດັ່ງນັ້ນ ບັດນີ້ຂໍທ່ານຈົ່ງສົ່ງຄົນຂອງທ່ານໄປຕັດໄມ້ຕົ້ນແປກທີ່ພູເລບານອນໃຫ້ຂ້າພະເຈົ້າ. ຄົນຂອງຂ້າພະເຈົ້າຈະສົມທົບກັບຄົນຂອງທ່ານ,
ເພື່ອທີ່ຂ້າພະເຈົ້າຈະໄດ້ມອບເງິນຄ່າຈ້າງໃຫ້ຄົນຂອງທ່ານແກ່ທ່ານຕາມທີ່ທ່ານໄດ້ຕັ້ງລາຄາໄວ້. ເພາະທ່ານກໍຮູ້ແລ້ວວ່າ
ທ່າມກາງພວກເຮົານີ້ບໍ່ມີໃຜຮູ້ຈັກການຕັດໄມ້ໄດ້ດີດັ່ງຄົນຂອງທ່ານ."
[7]ເມື່ອຮີຣາມໄດ້ຍິນຖ້ອຍຄໍາຂອງໂຊໂລໂມນ, ທ່ານກໍໄດ້ດີໃຈທີ່ສຸດ ແລະ ກ່າວວ່າ, "ວັນນີ້ຂໍສັນລະເສີນພຣະຢາເວ
ຜູ້ຊົງປະທານລູກຊາຍທີ່ມີປັນຍາຄົນຫນຶ່ງແກ່ດາວິດ ໃຫ້ຂຶ້ນເປັນກະສັດປົກຄອງຊົນຊາດໃຫຍ່ນີ້ແທນເພິ່ນ."[8]ຮີຣາມໄດ້ສົ່ງຄົນໄປຫາໂຊໂລໂມນ,
ກ່າວວ່າ, "ຂ້າພະເຈົ້າໄດ້ຮູ້ຂ່າວ ທີ່ທ່ານສົ່ງຄົນໄປຫາຂ້າພະເຈົ້າແລ້ວ. ຂ້າພະເຈົ້າພ້ອມຈະເຮັດຕາມທີ່ທ່ານຕ້ອງການໃນເລື່ອງໄມ້ຕົ້ນແປກ ແລະ
ໄມ້ສົນໃຫ້.
[9]ຄົນຂອງຂ້າພະເຈົ້າຈະເອົາໄມ້ເຫລົ່ານັ້ນຈາກພູເລບານອນຈົນຮອດທະເລ, ແລະ
ຂ້າພະເຈົ້າຈະມັດເປັນແພລ່ອງຕາມທະເລໄປບ່ອນທີ່ທ່ານໄດ້ນໍາຂ້າພະເຈົ້າ. ຂ້າພະເຈົ້າຈະເຮັດໃຫ້ພວກເຂົາແຕກແຍກຢູ່ທີ່ນັ້ນ, ແລະ
ຂໍທ່ານມາຮັບເອົາເຂົາໄປ. ຂໍທ່ານສົ່ງສະບຽງອາຫານແກ່ວັງຂອງຂ້າພະເຈົ້າ ເທົ່ານີ້ກໍສົມໃຈຂ້າພະເຈົ້າແລ້ວ."
[10]ດັ່ງນັ້ນຮີຣາມຈຶ່ງໄດ້ຈັດສົ່ງໄມ້ແປກ ແລະ ໄມ້ສົນໃຫ້ແກ່ໂຊໂລໂມນ ຕາມຄວາມຕ້ອງການທຸກຢ່າງ.
[11]ແລ້ວໂຊໂລໂມນກໍໄດ້ໃຫ້ເຂົ້າເດືອຍສີ່ພັນໂຕນເພື່ອເປັນອາຫານແກ່ວັງຂອງທ່ານ ແລະ ນໍ້າມັນຫມາກກອກເທດສີ່ພັນລິດ.
ໂຊໂລໂມນກໍໄດ້ສົ່ງສະບຽງອາຫານແບບນີ້ໃຫ້ແກ່ຮີຣາມທຸກປີ. [12]ພຣະຢາເວໄດ້ຊົງປະທານສະຕິປັນຍາແກ່ໂຊໂລໂມນ, ດັ່ງທີ່ໄດ້ຊົງສັນຍາໄວ້.
ມີສັນຕິສຸກລະຫວ່າງຮີຣາມກັບໂຊໂລໂມນ, ແລະ ທັງສອງກໍມີຂໍ້ຕົກລົງຕໍ່ກັນ.
[13]ກະສັດໂຊໂລໂມນໄດ້ເກນເອົາຄົນງານໂຢທາ ຈາກອິດສະຣາເອນທັງຫມົດ. ຄົນທີ່ຖືກເກນ ຄົນທີ່ຖືກເກນມີຈໍານວນຜູ້ຊາຍສາມຫມື່ນຄົນ.
[14]ທ່ານໄດ້ໃຊ້ເຂົາທັງຫລາຍໄປພູເລບານອນ, ເພິ່ນແບ່ງຄົນງານນີ້ອອກເປັນສາມພວກຄືພວກລະສິບພັນຄົນ
ແຕ່ລະພວກໃຊ້ເວລາເຮັດວຽກຢູ່ພູເລບານອນຫນຶ່ງເດືອນ ແລະ ກັບເມືອຢູ່ເຮືອນສອງເດືອນ. ແລະ ອາໂດນີຣາມໄດ້ເປັນຜູ້ເບິ່ງແຍງຄົນງານ.
[15]ໂຊໂລໂມນໄດ້ມີຄົນຂົນຫີນຫນັກເຈັດຫມື່ນຄົນ ແລະ ຄົນຕັກຫີນຢູ່ແຖບເນີນພູແປດຫມື່ນຄົນ,
[16]ນອກຈາກນີ້ຍັງມີຫົວຫນ້າຄົນໃຊ້ຂອງໂຊໂລໂມນອີກ ສາມພັນສາມຮ້ອຍຄົນ ເປັນຜູ້ເບິ່ງແຍງວຽກງານ ແລະ
ເປັນຫົວຫນ້າຜູ້ເບິ່ງແຍງປະຊາຊົນຜູ້ປະຕິບັດວຽກງານ.
[17]ກະສັດໄດ້ຊົງສັ່ງເຂົາທັງຫລາຍໃຫ້ສະກັດກ້ອນຫີນໃຫຍ່ງາມດີອອກມາ ເພື່ອວາງຮາກຖານຂອງພຣະວິຫານ.
[18]ດັ່ງນັ້ນຄົນງານກໍ່ສ້າງຂອງໂຊໂລໂມນ ແລະ ຄົນງານກໍ່ສ້າງຂອງຮີຣາມແລະ ຊາວບິບໂລກໍໄດ້ຈັດຕຽມກ້ອນຫີນ ແລະ ໄມ້ເພື່ອສ້າງວິຫານ.


generated on Tue Jun 17 19:01:42 2025

# 6

1ດັ່ງນັ້ນໂຊໂລໂມນໄດ້ເລີ່ມສ້າງພຣະວິຫານຂອງພຣະຢາເວ. ສິ່ງນີ້ໄດ້ເກີດຂຶ້ນໃນປີທີ 480
ຫລັງຈາກທີ່ປະຊາຊົນອິດສະຣາເອນໄດ້ອອກມາຈາກແຜ່ນດິນເອຢິບ, ໃນປີທີສີ່ຂອງການປົກຄອງອິດສະຣາເອນຂອງໂຊໂລໂມນ, ໃນເດືອນຊີເຟ
ຊຶ່ງເປັນເດືອນທີສອງ. 2ພຣະວິຫານຊຶ່ງກະສັດໂຊໂລໂມນໄດ້ສ້າງສຳລັບພຣະຢາເວນັ້ນຍາວຊາວເຈັດແມັດ ກວ້າງເກົ້າແມັດ ແລະ
ສູງສິບສາມແມັດເຄິ່ງ.

3ຫ້ອງຊື່ທາງປະຕູເຂົ້າເລິກສີ່ແມັດເຄິ່ງ ແລະກວ້າງເກົ້າແມັດ ຊຶ່ງກວ້າງເທົ່າກັບຕົວພຣະວິຫານ.
4ສຳລັບພຣະວິຫານທ່ານໄດ້ຊົງສ້າງປ່ອງຢ້ຽມດ້ວຍວົງກົບໂດຍໄດ້ເຮັດໃຫ້ທາງນອກແຄບກວ່າທາງໃນ.
5ດ້ານຂ້າງ ແລະ ດ້ານຫລັງພຣະວິຫານຕໍ່ຈາກລະບຽງດ້ານຂ້າງນອກ ເພິ່ນໄດ້ສ້າງຫ້ອງສາມຊັ້ນ ຊຶ່ງແຕ່ລະຊັ້ນສູງສອງແມັດຊາວເຊັນ.
6ຫ້ອງຊັ້ນລຸ່ມສຸດ ກວ້າງສອງແມັດຊາວເຊັນ, ຊັ້ນກາງກວ້າງສອງແມັດເຈັດສິບເຊັນ. ແລະ ຊັ້ນທີສາມກວ້າງສາມແມັດສິບເຊັນ.
ສຳລັບອ້ອມດ້ານນອກ ທ່ານໄດ້ສ້າງຂອບຢື່ນອອກມາຈາກຝາຂອງພຣະວິຫານໂດຍອ້ອມທັງຫມົດ
ເພື່ອວ່າແຕ່ລະຫ້ອງຈະຕໍ່ກັນໂດຍບໍ່ຕ້ອງໃຊ້ໄມ້ຂາງ.
7ພຣະວິຫານນັ້ນກໍສ້າງດ້ວຍຫີນ ຊຶ່ງຕຽມມາຈາກບໍ່ຫີນ ເພາະສະນັ້ນຈຶ່ງບໍ່ໄດ້ຍິນສຽງຄ້ອນຕີ, ຂວານ ຫລື ເຄື່ອງມືຕ່າງໆທີ່ເປັນເຫລັກ
ໃນພຣະວິຫານ ຂະນະທີ່ເຮັດວຽກກໍ່ສ້າງ. 8ທາງດ້ານທິດໃຕ້ຂອງພຣະວິຫານ ຄືທາງເຂົ້າຫ້ອງຊັ້ນລຸ່ມ,
ແລ້ວຄົນກໍຂຶ້ນໂດຍໃຊ້ຂັ້ນໄດໄປຫາຊັ້ນທີສອງ, ແລະ ຈາກຊັ້ນທີສອງໄປຫາຊັ້ນທີສາມ.
9ດັ່ງນັ້ນໂຊໂລໂມນໄດ້ສ້າງພຣະວິຫານ ແລະໄດ້ສ້າງຈົບແລ້ວ; ທ່ານໄດ້ໃຊ້ໄມ້ແປກເຮັດຂື່ ແລະ ເພດານ. 10ທ່ານໄດ້ສ້າງຫ້ອງອ້ອມພຣະວິຫານ,
ແຕ່ລະດ້ານສູງສອງແມັດຊາວເຊັນ; ໂດຍໄດ້ເຊື່ອມຕິດກັບຕົວພຣະວິຫານໂດຍໃຊ້ໄມ້ແປກ.
11ພຣະວັດຈະນະຂອງພຣະຢາເວໄດ້ມາຮອດໂຊໂລໂມນວ່າ, 12"ກ່ຽວກັບພຣະວິຫານນີ້ຊຶ່ງເຈົ້າກຳລັງສ້າງຢູ່,
ຖ້າເຈົ້າດຳເນີນຕາມກົດເກນຂອງເຮົາເຊື່ອຟັງກົດຂອງເຮົາ ແລະ ເຮັດຄວາມຍຸດຕິທຳ, ແລະ ຮັກສາພຣະບັນຍັດທັງຫມົດຂອງເຮົາ,
ໂດຍດຳເນີນຕາມ ແລ້ວເຮົາກໍຢືນຢັນຄຳສັນຍາຂອງເຮົາກັບເຈົ້າຊຶ່ງເຮົາໄດ້ເຮັດໄວ້ກັບດາວິດພໍ່ຂອງເຈົ້າ.
13ເຮົາຈະຢູ່ທ່າມກາງປະຊາຊົນອິດສະຣາເອນ ແລະ ຈະບໍ່ຖິ້ມພວກເຂົາເລີຍ."
14ດັ່ງນັ້ນໂຊໂລໂມນໄດ້ສ້າງພຣະວິຫານສຳເລັດ. 15ຝາຂ້າງໃນຂອງພຣະວິຫານຕັ້ງແຕ່ພື້ນຈົນຈຸເພດານແມ່ນເຮັດດ້ວຍແປ້ນໄມ້ແປກ. ແລະ
ຈາກພື້ນກໍປູດ້ວຍໄມ້ສົນ, ແລະ ເພິ່ນກໍໄດ້ປົກຄຸມພື້ນເຮືອນດ້ວຍໄມ້ປະດັບ.
16ທ່ານໄດ້ສ້າງດ້ານຫລັງຂອງພຣະວິຫານດ້ວຍແປ້ນໄມ້ແປກຈາກພື້ນຮອດເພດານ. ຊຶ່ງຍາວເກົ້າແມັດ ທ່ານໄດ້ສ້າງຫ້ອງສັກສິດທີ່ສຸດ,
ໃຫ້ເປັນຫ້ອງຊັ້ນໃນສຸດ. 17ຫ້ອງທີ່ຢູ່ຕໍ່ຫນ້າຫ້ອງຊັ້ນໃນສັກສິດທີ່ສຸດ,ນັ້ນແມ່ນ, ທີ່ສຸດຍາວສິບແປດແມັດ. 18ສ່ວນທາງໃນພຣະວິຫານ,
ທີ່ເປັນໄມ້ແປກແກະເປັນຮູບນ້ຳເຕົ້ານັ້ນ ແລະ ດອກໄມ້ບານ. ທາງໃນທັງຫມົດເປັນໄມ້ແປກ. ບໍ່ມີງານທີ່ໃຊ້ຫີນໃຫ້ເຫັນເລີຍທາງດ້ານໃນ.
19ໂຊໂລໂມນໄດ້ຈັດຕຽມຫ້ອງຊັ້ນໃນສຸດໄວ້ທາງໃນພຣະວິຫານ ເພື່ອຈະວາງຫີບພັນທະສັນຍາຂອງພຣະຢາເວໄວ້ບ່ອນນັ້ນ.
20ຫ້ອງຊັ້ນໃນສຸດນັ້ນຍາວເກົ້າແມັດ, ກວ້າງເກົ້າແມັດ, ແລະ ສູງເກົ້າແມັດ. ໂຊໂລໂມນໄດ້ໂອບຝາດ້ວຍທອງຄຳບໍລິສຸດ ແລະ
ແທ່ນບູຊາກໍແອ້ມດ້ວຍໄມ້ແປກ.
21ໂຊໂລໂມນໄດ້ໂອບທາງໃນພຣະວິຫານດ້ວຍທອງຄຳບໍລິສຸດ, ແລະ ທ່ານໄດ້ວາງໂສ້ທອງຄຳໄວ້ຫນ້າຫ້ອງຊັ້ນໃນສຸດ, ແລະ
ດ້ານຫນ້າກໍໃຊ້ຄຳໂອບເຊັ່ນດຽວກັນ. 22ທ່ານໄດ້ໂອບພຣະວິຫານທາງໃນທັງຫລັງດ້ວຍທອງຄຳ ຈົນພຣະວິຫານນັ້ນສຳເລັດທັງຫມົດ.
ທ່ານກໍໄດ້ໂອບແທ່ນບູຊາທັງແທ່ນ ທີ່ເປັນຂອງຫ້ອງຊັ້ນໃນສຸດດ້ວຍທອງຄຳ.
23ໂຊໂລໂມນໄດ້ສ້າງເຄຣຸບສອງຕົນດ້ວຍໄມ້ຫມາກກອກເທດ, ແຕ່ລະຕົນສູງສີ່ແມັດສີ່ສິບເຊັນ, ໃນຫ້ອງທາງໃນສຸດ.
24ປີກຂ້າງຫນຶ່ງຂອງເຄຣຸບຍາວສອງແມັດຊາວເຊັນ ແລະ ອີກຂ້າງຫນຶ່ງກໍຍາວສອງແມັດຊາວເຊັນ. ຈາກສົ້ນປີກຂ້າງຫນຶ່ງໄປຮອດອີກຂ້າງຫນຶ່ງ.
25ປີກອີກຂ້າງຫນຶ່ງຫ່າງກັນສີ່ແມັດສີ່ສິບເຊັນ. ເຄຣຸບອີກຕົນຫນຶ່ງມີໄລຍະສ່ວນປີກສີ່ແມັດສີ່ສິບເຊັນ. ເຄຣຸບທັງສອງຕົນມີຂະຫນາດເທົ່າກັນ ແລະ
ຮູບຮ່າງແບບດຽວກັນ. 26ຄວາມສູງຂອງເຄຣຸບຕົນຫນຶ່ງສີ່ແມັດສີ່ສິບເຊັນ ແລະ ອີກຕົນຫນຶ່ງກໍຄືກັນ.
27ໂຊໂລໂມນໄດ້ວາງເຄຣຸບໄວ້ໃນສ່ວນຊັ້ນໃນທີ່ສຸດຂອງພຣະວິຫານ. ປີກຂອງເຄຣຸບນັ້ນກາງອອກ
ເພື່ອທີ່ຈະໃຫ້ອີກຂ້າງມາຈຸກັນຈົນຮອດຝາອີກຂ້າງຫນຶ່ງ ແລະ ປີກຂອງເຄຣຸບອີກຕົນຫນຶ່ງຕິດກັບຝາອີກຂ້າງຫນຶ່ງ.
ປີກຂອງເຄຣຸບທັງສອງຕົນກໍມາຕິດກັນທາງກາງຂອງຫ້ອງທີ່ສັກສິດທີ່ສຸດ. 28ໂຊໂລໂມນໄດ້ໂອບເຄຣຸບນັ້ນດ້ວຍທອງຄຳ.
29ທ່ານໄດ້ຊົງແກະສະຫລັກຝັງຂອງພຣະວິຫານນັ້ນ ດ້ວຍຮູບແກະສະຫລັກເປັນຮູບເຄຣຸບ, ຮູບຕົ້ນຕານ, ແລະ ຮູບດອກໄມ້ບານທັງຫ້ອງທາງໃນ
ແລະ ທາງນອກ. 30ໂຊໂລໂມນໄດ້ປູພື້ນຂອງພຣະວິຫານນັ້ນ ດ້ວຍທອງຄຳທັງຂ້າງນອກ ແລະ ຂ້າງໃນ.
31ໂຊໂລໂມນໄດ້ເຮັດບານປະຕູຄູ່ ດ້ວຍໄມ້ຫມາກກອກເທດສຳລັບທາງເຂົ້າສູ່ຫ້ອງຊັ້ນໃນສຸດ. ທັບຫລັງ ແລະ
ວົງກົບປະຕູໄດ້ເຮັດເປັນຮູບຫ້າຫລ່ຽມ. 32ດັ່ງນັ້ນທ່ານໄດ້ເຮັດປະຕູດ້ວຍໄມ້ຫມາກກອກເທດ, ແລະ
ທ່ານໄດ້ແກະສະຫລັກບານປະຕູຄູ່ເປັນຮູບເຄຣຸບ, ຮູບຕົ້ນຕານ ແລະ ຮູບດອກໄມ້ບານ. ທ່ານໄດ້ໂອບບານປະຕູດ້ວຍທອງຄຳ ແລະ
ທ່ານແຜ່ທອງຄຳຫຸ້ມເຄຣຸບແລະ ຫຸ້ມຕົ້ນຕານຕ່າງໆ.
33ດ້ວຍວິທີນີ້, ໂຊໂລໂມນໄດ້ຊົງເຮັດວົງກົບປະຕູທາງເຂົ້າພຣະວິຫານດ້ວຍໄມ້ຫມາກກອກເທດເປັນຮູບສີ່ລ່ຽມ 34ແລະ
ເຮັດປະຕູສອງປະຕູດ້ວຍໄມ້ສົນສາມໃບ. ບານປະຕູສອງບານຂອງປະຕູພັບຫາກັນໄດ້ ແລະ ອີກສອງບານຂອງອີກປະຕູຫນຶ່ງພັບໄດ້ຄືກັນ.
35ພະອົງໄດ້ແກະສະຫລັກເຄຣຸບ, ຕົ້ນຕານ, ແລະ ດອກໄມ້ບານເທິງບານປະຕູນັ້ນ, ແລະ
ພະອົງໄດ້ໂອບດ້ວຍທອງຄຳສະຫມ່ຳສະເຫມີກັບງານແກະສະຫລັກນັ້ນ.
36ພະອົງໄດ້ສ້າງລານຊັ້ນໃນດ້ວຍກຳແພງຫີນສະກັດສາມຊັ້ນ ແລະ ດ້ວຍໄມ້ສົນສີດາຫນຶ່ງຊັ້ນ.
37ຮາກຖານຂອງພຣະວິຫານຂອງພຣະຢາເວກໍຖືກວາງໄວ້ໃນປີທີສີ່, ຂອງເດືອນສິບ. 38ໃນປີທີສິບເອັດ, ໃນເດືອນເບລູ, ຊຶ່ງເປັນເດືອນທີແປດ,
ຊຶ່ງພຣະວິຫານນັ້ນກໍໄດ້ສຳເລັດຫມົດທຸກສ່ວນ ແລະ ຕາມທີ່ໄດ້ກຳນົດໄວ້ທຸກຢ່າງ. ໂຊໂລໂມນໄດ້ຊົງສ້າງພຣະວິຫານນັ້ນເຈັດປີ.

7 [1]ໂຊໂລໂມນໄດ້ໃຊ້ເວລາສິບສາມປີເພື່ອສ້າງຣາຊວັງຂອງເພິ່ນເອງ.[2]ເພິ່ນໄດ້ຊົງສ້າງພະຣາຊວັງປ່າແຫ່ງເລບານອນ. ຊຶ່ງຍາວສີ່ສິບສີ່ແມັດ,
ກວ້າງຊາວສອງແມັດ, ແລະ ສູງສິບສາມແມັດເຄິ່ງ. ພະຣາຊວັງໄດ້ສ້າງຂຶ້ນເທິງເສົາໄມ້ແປກ ມີຄານໄມ້ແປກຢູ່ເທິງເສົາ.

[3]ພະວິຫານມຸງດ້ວຍໄມ້ແປກເທິງຄານ. ຄານເຫລົ່ານັ້ນໄດ້ຈັບຢູ່ເທິງເສົາ. ມີຄານສີ່ສິບຫ້າຕົ້ນ, ແຖວລະສິບຫ້າຕົ້ນ.[4]ມີຄານສາມແຖວ, ແລະ
ໜ້າປະຕູແຕ່ລະບານຢູ່ກົງກັນຂ້າມທັງສາມຊຸດ.[5]ປະຕູ ແລະ ເສົາທັງຫມົດເປັນຮູບສີ່ຫລ່ຽມພ້ອມຄານ, ແລະ
ໜ້າປະຕູຢູ່ກົງກັນຂ້າມປ່ອງຢ້ຽມທັງສາມຊຸດ.
[6]ມີໂຖງລະຫວ່າງເສົາຍາວຫ້າສິບສອກ ແລະກວ້າງສາມສິບແມັດເຄິ່ງ, ມີມຸມຄັນໄດດ້ານໜ້າ ພ້ອມເສົາ ແລະ ຫລັງຄາ.
[7]ໂຊໂລໂມນໄດ້ຊົງສ້າງບັນລັງ ເຊິ່ງເອີ້ນອີກວ່າຫ້ອງຕັດສິນຄວາມ, ເປັນບ່ອນທີ່ກະສັດໂຊໂລໂມນຕັດສິນຄະດີຕ່າງໆ. ແລະ
ອ້ອມດ້ວຍໄມ້ແປກຕັ້ງແຕ່ພື້ນຈົນຈຸເພດານ.
[8]ບໍລິເວນທີ່ກະສັດໂຊໂລໂມນຢູ່ນັ້ນ, ແມ່ນໄດ້ສ້າງຂຶ້ນໃນເດີ່ນອີກແຫ່ງຫນຶ່ງພາຍໃນພື້ນທີ່ພະຣາຊວັງ,
ຫ້ອງນີ້ແມ່ນໄດ້ສ້າງແບບດຽວກັບຕົວຕຶກອື່ນໆ. ເພິ່ນໄດ້ສ້າງເຮືອນແບບນີ້ໃຫ້ເມຍຂອງເພິ່ນ, ຜູ້ທີ່ເປັນລູກສາວຂອງຟາໂຣ.
[9]ຫໍໂຮງຕ່າງໆພ້ອມທັງເດີ່ນໃຫຍ່ແມ່ນໄດ້ສ້າງດ້ວຍຫີນ, ອັນມີຄ່າທີ່ໄດ້ສະກັດອອກມາຕາມຂະໜາດ ແລະ ໄດ້ຕັດດ້ວຍເລື່ອຍ ແລະ
ໄດ້ຂັດລຽບທັງດ້ານໃນ ແລະ ດ້ານນອກ. ຫີນເຫລົ່ານີ້ໄດ້ໃຊ້ຕັ້ງແຕ່ ຮາກຖານຈົນຮອດດ້ານເທິງສຸດ, ແລະ ມີຕັ້ງແຕ່ທາງນອນຈົນເຖິງລານໃຫຍ່.
[10]ຮາກຖານນັ້ນໄດ້ເຮັດດ້ວຍຫີນ ອັນມີຄ່າຍາວແປດແມັດ ແລະ ສິບແມັດ.
[11]ສ່ວນເທິງກໍເປັນຫີນອັນມີຄ່າສະກັດອອກມາຕາມຂະໜາດ, ແລະ ໄມ້ແປກ.[12]ສະໜາມໃຫຍ່ທີ່ຢູ່ອ້ອມຮອບ ພະຣາຊວັງມີຫີນຕັດສາມແຖວ
ແລະ ໄມ້ແປກແຖວຫນຶ່ງຄ້າຍຄືລານຊັ້ນໃນວິຫານຂອງພຣະຢາເວ ແລະ ມຸມຄັນໄດຂອງວິຫານ.
[13]ກະສັດໂຊໂລໂມນໄດ້ໃຊ້ຄົນໄປນຳຮູລາມ ແລະ ໄດ້ນຳເຂົາມາຈາກເມືອງໄທລະ.[14]ຮູລາມເປັນລູກຊາຍຂອງແມ່ຫມ້າຍຊົນເຜົ່ານັບທາລີ;
ບິດາຂອງເຂົາເປັນຊາວຕີເຣ ແລະ ເປັນຊ່າງທອງສຳຣິດ. ຮູລາມເຕັມໄປດ້ວຍສະຕິປັນຍາ ແລະ ຄວາມເຂົ້າໃຈ ແລະ
ຝີມືຊ່ຽວຊານທີ່ຈະເຮັດກັບທອງສຳຣິດທຸກຢ່າງ. ລາວໄດ້ເຂົ້າມາເຝົ້າກະສັດໂຊໂລໂມນ ເພື່ອເຮັດວຽກກັບທອງສຳລິດເພື່ອກະສັດ.
[15]ຮູລາມໄດ້ຕົບແຕ່ງເສົາທອງສຳລິດສອງເສົາ, ແຕ່ລະເສົາສູງສິບແປດແມັດ ແລະ ສິບສອງແມັດໃນເສັ້ນອ້ອມວົງ.
[16]ເຂົາໄດ້ເຮັດຫົວເສົາສອງອັນເທິງຈອມເສົາ ເພື່ອຈະວາງໄວ້ເທິງຍອດເສົາ. ຫົວເສົາແຕ່ລະອັນສູງຫ້າແມັດ.[17]ຕາຫນ່າງເປັນຕາຫມາກພິລາ
ແລະ ພວງມະໄລໂຊສຳລັບຕົບແຕ່ງບົວທີ່ຢູ່ເທິງຫົວເສົາ, ເຈັດອັນສຳລັບເສົາແຕ່ລະອັນ.
[18]ດັ່ງນັ້ນຮູລາມໄດ້ເຮັດລູກທັບທິມສອງແຖວອ້ອມເທິງຍອດແຕ່ລະເສົາຄ້ຳ ເພື່ອຕົບແຕ່ງເສົາເຫລົ່ານັ້ນ.[19]ຊຶ່ງບົວທີ່ຢູ່ເທິງຍອດເສົາທີ່ຢູ່ໃນມູມຂັ້ນໄດ
ໄດ້ຕົບແຕ່ງດ້ວຍຕະກຽງໄຟ, ສູງສີ່ແມັດ.
[20]ບົວຫົວເສົາສອງຕົ້ນນັ້ນຢູ່ລວມ, ໃກ້ກັບສ່ວນເທິງຫລາຍ, ມີລູກທັບທິມສອງຮ້ອຍລູກຢູ່ອ້ອມຮອບ.[21]ເຂົາໄດ້ຕັ້ງເສົາໄວ້ທີ່ມູມຂັ້ນໄດວິຫານ.
ເສົາເບື້ອງຂວາໄດ້ຊື່ວ່າຢາກິນ, ແລະ ເສົາຢູ່ດ້ານຊ້າຍຊື່ວ່າໂບອາດ.[22]ເທິງຍອດເສົາຕົກແຕ່ງຄ້າຍເສົາໄຟ.
ການຕົກແຕ່ງເສົາກໍໄດ້ສຳເລັດໃນວິທີນີ້.
[23]ຮູລາມໄດ້ເຮັດອ່າງນ້ຳຈາກໂລຫະຫລໍ່, ແທກຈາກຂອບຫນຶ່ງໄປຫາອີກຂອບຫນຶ່ງໄດ້ສິບແມັດ, ມັນສູງຫ້າແມັດ, ແລະ
ແທກອ່າງນ້ຳໂດຍຮອບສາມສິບແມັດ.[24]ລຸ່ມຂອບອ່າງນ້ຳໄດ້ຫລໍ່ເປັນຮູບນ້ຳເຕົ້າ, ສິບລູກທຸກໄລຍະຫນຶ່ງແມັດ,
ຫລໍ່ເປັນອັນດຽວກັນກັບອ່າງນ້ຳເວລາດຽວກັນກັບຫລໍ່ອ່າງ.
[25]ອ່າງນ້ຳນັ້ນຕັ້ງຢູ່ເທິງງົວສິບສອງໂຕ, ໂດຍສາມໂຕປິ່ນຫນ້າໄປທາງທິດເຫນືອ, ສາມໂຕປິ່ນຫນ້າໄປທິດຕາເວັນຕົກ, ແລະ
ອີກສາມໂຕປິ່ນຫນ້າໄປທາງທິດໃຕ້, ແລະ ປະສາມໂຕປິ່ນຫນ້າໄປທາງທິດຕາເວັນອອກ. ອ່າງນ້ຳວາງເທິງງົວ, ແລະ
ໂດຍໃຫ້ສ່ວນຫລັງຂອງງົວທຸກໂຕຢູ່ດ້ານໃນ.[26]ອ່າງຫນ້າເທົ່າກັບຫນຶ່ງຝາມື, ແລະ ຂອບອ່າງເຮັດຄືຂອບຖ້ວຍ, ຄ້າຍດອກບົວກຳລັງບານ.
ຂັນຫນ່ວຍນີ້ບັນຈຸນ້ຳໄດ້ສີ່ຫມື່ນລິດ.
[27]ຮູຣາມໄດ້ເຮັດແທ່ນທອງສຳຣິດສິບຄັນ ແຕ່ລະຄັນຍາວຫນຶ່ງແມັດແປດສິບເຊັນ ແລະ ກວ້າງຫນຶ່ງແມັດແປດສິບເຊັນ, ແລະ
ສູງຫນຶ່ງເມັດສາມສິບເຊັນ.[28]ງານຂອງແທ່ນໄດ້ເປັນດັ່ງນີ້. ແທ່ນໄດ້ມີແຜງຊຶ່ງຕັ້ງລະຫວ່າງຂອບ,[29]ແລະ ເທິງແຜງ ແລະ ກອບນັ້ນມີຮູບໂຕສິງ,
ງົວ, ແລະ ເຄຣຸບ. ເຫນືອຂອບທີ່ຢູ່ເທິງ ແລະ ລຸ່ມສິງໂຕ ແລະ ງົວມີພວງມະໄລຍ້ອຍເປັນງານຂອງຊາງຕີ.
[30]ກວຽນແຕ່ລະຄັນມີລໍ້ທອງສຳຣິດສີ່ລໍ້ ແລະ ມີເພົາເປັນທອງສຳຣິດທີ່ແຈທັງສີ່ນັ້ນເປັນທອງສຳຣິດຄ້ຳອ່າງໄວ້.
ທີ່ຮອງຮັບນັ້ນໄດ້ຫລໍ່ໂດຍມີພວງມະໄລຫ້ອຍແຕ່ລະຂ້າງ.[31]ເຄື່ອງຄຳນີ້ໄດ້ຕົກແຕ່ງເປັນກົງຈັກສັບເປັນລວດລາຍ,
ຢູ່ເທິງກວຽນມີຂອບວົງມົນສຳລັບຕັ້ງອ່າງ, ຊຶ່ງສູງສິບຫ້າເຊັນ. ນັບຈາກຂ້າງເທິງຂອງກຽນລົງໄປ, ແລະ
ເລິກລົງໄປສິບແປດເຊັນຂອບນີ້ໄດ້ແກະສະຫລັກເປັນລວດລາຍອ້ອມຮອບ.
[32]ກົງລໍ້ທັງສີ່ຢູ່ລຸ່ມທັງສູງຫົກສິບເຊັນ, ແລະມີເພົາເປັນທ່ອນດຽວກັນກັບກວຽນ.[33]ບັນດາລົດລໍ້ນັ້ນໄດ້ຕີເຫລັກຄືລໍ້ລົດມ້າຮົບເສິກ, ທັງເພົາ, ຂອບລໍ້,
ດຶວລໍ້, ແລະດຸມລໍ້ ລໍ້ກໍຫລໍ່ຈາກໂລຫະທັງຫມົດ.
[34]ກວຽນແຕ່ລະຄັນມີຂາຄ້ຳສີ່ຂາທີ່ແຈເບື້ອງລຸ່ມຂອງມັນ, ຊຶ່ງເປັນທ່ອນດຽວກັນກັບກວຽນ.
[35]ຢູ່ເທິງປາກກວຽນແຕ່ລະຄັນມີແຂບອ້ອມຍາວຊາວສອງເຊັນ, ຂາຄ້ຳ ແລະ ແຜ່ນຝາດ້ານຂ້າງແມ່ນເຮັດເປັນທ່ອນດຽວກັນກັບກວຽນ.
[36]ເທິງແຜ່ນຮອງຮັບ ແລະ ກະດານໄດ້ແກະສະຫລັກຮູບເຄຣຸບ, ຮູບສິງ, ແລະ ຮູບຕົ້ນຕານ
ບໍ່ວ່າບ່ອນໃດທີ່ເປັນວ່າງກໍມີຮູບພວງມະໄລອ້ອມຢູ່ໄປທົ່ວ.[37]ຮູຣາມໄດ້ສ້າງກວຽນທັງຫມົດດັ່ງນີ້ຄືທຸກຄັນຄືກັນ. ຫມົດທຸກອັນຂະໜາດດຽວກັນ
ແລະ ຮູບຮ່າງຫນຶ່ງ, ແລະ ມີຮູບຊົງຄືກັນ.
[38]ຮູຣາມເຮັດອ່າງສິບຫນ່ວຍ. ອ່າງຫນ່ວຍຫນຶ່ງສຳລັບກວຽນລຳຫນຶ່ງ. ແຕ່ລະຫນ່ວຍກວ້າງຫນຶ່ງແມັດແປດສິບເຊັນ ແລະ
ອ່າງຫນຶ່ງຫນ່ວຍສາມາດບັນຈຸໄດ້ແປດຮ້ອຍລິດ.[39]ລາວໄດ້ເອົາກວຽນຫ້າລຳຕັ້ງໄວ້ທາງທິດໃຕ້ຂອງວິຫານ ແລະ ອີກຫ້າລຳຕັ້ງໄວ້ທາງທິດເຫນືອ
ສ່ວນອ່າງທອງສຳຣິດນັ້ນ. ລາວໄດ້ເອົາຕັ້ງໄວ້ສີ່ແຈທາງທິດຕາເວັນອອກຂອງວິຫານ, ເຊິ່ງຫນ້າກັບທາງທິດໃຕ້ຂອງວິຫານ.
[40]ຮູຣາມຍັງໄດ້ເຮັດຫມໍ້ ຊວ້ານ ແລະ ຖ້ວຍ. ແລ້ວເຂົາກໍໄດ້ສຳເລັດງານທັງສິ້ນ ທີ່ເຂົາໄດ້ເຮັດຖວາຍກະສັດໂຊໂລໂມນ
ສຳລັບວິຫານຂອງພຣະຢາເວ:[41]ເສົາສອງຕົ້ນ,

 generated on Tue Jun 17 19:01:42 2025

ຫົວເສົາຮັບເພດານສອງອັນທີ່ເປັນຮູບຖ້ວຍສາຍສ້ອຍທີ່ຖັກເປັນລວດລາຍຮູບໄສ້ຂອງແຕ່ລະເສົາຮູບໝາກພິລາທອງສຳຣິດສີ່ຮ້ອຍໜ່ວຍ ແລະ ຕາຂ່າຍສອງຜືນ ຊື່ງຄຸມຄືທັງສອງຂອງບົວທີ່ຢູ່ເທິງຫົວເສົາ.
[42]ເຂົາໄດ້ເຮັດລູກທັບທິມສີ່ຮ້ອຍລູກສຳລັບຕາຄ່າຍສອງຜືນຕາຄ່າຍຜືນໜຶ່ງ: ມີລູກທັບທິມສອງແຖວ
ສຳລັບແຕ່ລະທ່ອນເຮັດດ້ວຍທ່ອນໄມ້ເພື່ອປົກຝາຖ້ວຍສອງໃບທີ່ຄ້າຍກັບໂຖໃສ່ເສົາ, ເພື່ອຄຸມທັງສອງຂອງບົວທີ່ຢູ່ເທິງເສົາ,[43]ແທ່ນສິບແທ່ນ ແລະ ອ່າງສິບໜ່ວຍຊຶ່ງຢູ່ເທິງແທ່ນນັ້ນ.
[44]ເຂົາໄດ້ເຮັດທະເລ ແລະ ງົວສິບສອງໂຕຢູ່ຂ້າງລຸ່ມ;[45]ນອກຈາກນີ້ຍັງມີໝໍ້, ທັບທິມ, ອ່າງ, ແລະ ພາຊະນະທັງໝົດ.
ຮູຣາມໄດ້ເຮັດສິ່ງເຫລົ່ານີ້ດ້ວຍທອງສຳຣິດ, ມາຖວາຍກະສັດໂຊໂລໂມນ, ສຳລັບວິຫານຂອງພຣະຢາເວ.
[46]ກະສັດໄດ້ຫລໍ່ສິ່ງເຫລົ່ານີ້ໃນທີ່ພຽງລຸ່ມຂອງແມ່ນ້ຳຈໍແດນ, ແລະ ໃນທີ່ດິນໜຽວ ຢູ່ລະຫວ່າງເມືອງຊຸກໂກ ແລະ
ເມືອງຊາເຣທານໃນຮ່ອມພູຈໍແດນ.[47]ໂຊໂຣໂມນໄດ້ຊົ່ງຊັ່ງເຄື່ອງໃຊ້ທັງໝົດນີ້, ເພາະມີຫລາຍໂພດ
ຈຶ່ງບໍ່ສາມາດຊັ່ງຫານ້ຳໜັກຂອງທອງສຳຣິດໄດ້.
[48]ໂຊໂຣໂມນໄດ້ເຮັດເຄື່ອງໃຊ້ທັງຫລາຍທີ່ຢູ່ໃນວິຫານພຣະຢາເວທັງໝົດຈາກທອງຄຳ: ຄືແທ່ນບູຊາທອງຄຳ ແລະ
ໂຕະທອງຄຳທີ່ໃຊ້ວາງຂະໜົມປັງສະເພາະພຣະພັກ.[49]ແທ່ນບູຊາ, ດ້ານຂວາຫ້າອັນ, ດ້ານຊ້າຍຫ້າອັນ, ຢູ່ໜ້າຫ້ອງຊັ້ນໃນສຸດ,
ເຮັດດ້ວຍທອງຄຳບໍລິສຸດ, ແລະດອກໄມ້, ຕະກຽງ, ແລະ ຄີມເຮັດຈາກທອງຄຳ.
[50]ຈອກ, ມີດຕັດສຳລັບຕັດໃສ້ຕະກຽງ, ຊາມ, ບ່ວງ, ແລະ ໝໍ້ທັງໝົດລ້ວນແຕ່ເຮັດດ້ວຍທອງຄຳບໍລິສຸດ. ຍັງມີບານພັບປະຕູຂອງຫ້ອງຊັ້ນໃນ,
ບ່ອນສັກສິດທີ່ສຸດ, ແລະ ບານພັບຕ່າງໆນອກປະຕູພຣະວິຫານ, ທັງໝົດລ້ວນແຕ່ເຮັດດ້ວຍທອງຄຳ.
[51]ດ້ວຍວິທີນີ້, ວຽກທຸກຢ່າງທີ່ກະສັດໂຊໂລໂມນໄດ້ເຮັດກ່ຽວກັບພຣະວິຫານຂອງພຣະຢາເວກໍໄດ້ສຳເລັດລົງ.
ດັ່ງນັ້ນໂຊໂລໂມນຈຶ່ງໄດ້ນຳສິ່ງຂອງທີ່ດາວິດພໍ່ຂອງຕົນໄດ້ແຍກໄວ້ຄື, ເຄື່ອງເງິນ, ເຄື່ອງທອງຄຳ, ແລະ ເຄື່ອງໃຊ້ຕ່າງໆມາ, ແລະ
ເກັບໄວ້ໃນຄັງພຣະວິຫານຂອງພຣະຢາເວ.

 generated on Tue Jun 17 19:01:42 2025

# 8

[1]ໂຊໂລໂມນໄດ້ຊົງເອີ້ນປະຊຸມຜູ້ອາວຸໂສຂອງອິດສະຣາເອນ, ແລະ ບັນດາຂອງເຜົ່າຕ່າງໆ, ແລະ
ຫົວໜ້າຄອບຄົວຂອງຄົນອິດສະຣາເອນທັງໝົດຕໍ່ພຣະພັກພຣະອົງໃນເມືອງເຢຣູຊາເລັມ,
ເພື່ອຈະນຳຫີບພັນທະສັນຍາຂອງພຣະຢາເວຈາກເມືອງແຫ່ງດາວິດ, ນັ້ນຄືສີໂອນ.
[2]ຜູ້ຊາຍທັງໝົດຂອງອິດສະຣາເອນກໍໄດ້ມາປະຊຸມກັນຕໍ່ໜ້າກະສັດໂຊໂລໂມນທີ່ງານລ້ຽງ, ໃນເດືອນເອທານິມ, ຊຶ່ງກົງກັບເດືອນທີເຈັດ.

[3]ພວກຜູ້ອາວຸໂສທັງໝົດຂອງອິດສະຣາເອນໄດ້ມາ, ແລະ ພວກປະໂຣຫິດກໍໄດ້ຍົກຫີບມາ.[4]ພວກເຂົາທັງຫລາຍໄດ້ນຳຫີບຂອງພຣະຢາເວ,
ແລະ ເຕັນນັດພົບ, ອີກທັງເຄື່ອງໃຊ້ທີ່ບໍລິສຸດທຸກຢ່າງຊຶ່ງຢູ່ໃນເຕັນຂຶ້ນມາ. ພວກປະໂຣຫິດ ແລະ ພວກເລວີໄດ້ນຳຂອງເຫລົ່ານັ້ນຂຶ້ນມາ.
[5]ກະສັດໂຊໂລໂມນໄດ້ມາປະຊຸມພ້ອມບັນດາຊຸມນຸມຊົນທັງໝົດຂອງອິດສະຣາເອນຕໍ່ໜ້າຫີບພັນທະສັນຍາ, ແລະ ໄດ້ຖວາຍແກະ ແລະ
ງົວຈົນບໍ່ສາມາດນັບຈຳນວນໄດ້.
[6]ປະໂລຣິດໄດ້ນຳຫີບພັນທະສັນຍາຂອງພຣະຢາເວມາຍັງທີ່ຕັ້ງຂອງຫີບ, ໃນຫ້ອງຊັ້ນໃນສຸດຂອງວິຫານ, ໃນສະຖານທີ່ ທີ່ສັກສິດທີ່ສຸດ,
ພາຍໄຕ້ປີກຂອງເຄຣຸບ.[7]ປີກຂອງເຄຣຸບໄດ້ກາງອອກເຖິງສະຖານທີ່ຂອງຫີບພັນທະສັນຍາ, ແລະ ປົກຄຸມຫີບໄວ້ ແລະ ໄມ້ຄານຊຶ່ງໃຊ້ຫາມຫີບ.
[8]ໄມ້ຄານຫາມນັ້ນຍາວຫລາຍ ຈຶ່ງເຫັນປາຍຄານຫາມໄດ້ ຢູ່ຕໍ່ໜ້າສະຖານທີ່ສັກສິດ ຫ້ອງຊັ້ນໃນສຸດ, ແຕ່ບໍ່ອາດເບິ່ງເຫັນຈາກພາຍນອກ.
ຄານຫາມກໍຍັງຢູ່ທີ່ນັ້ນຈົນທຸກວັນນີ້.
[9]ບໍ່ມີສິ່ງໃດໃນຫີບນອກຈາກຫີນສອງແຜ່ນ ຊຶ່ງໂມເຊໃສ່ໄວ້ທີ່ພູເຂົາໂຮເຣັບ, ເມື່ອພຣະຢາເວໄດ້ເຮັດພັນທະສັນຍາກັບປະຊາຊົນອິດສະຣາເອນ
ເມື່ອເຂົາທັງຫລາຍໄດ້ອອກມາຈາກແຜ່ນດິນເອຢິບ.[10]ຕໍ່ມາເມື່ອພວກປະໂຣຫິດໄດ້ອອກມາຈາກພຣະວິຫານຂອງພຣະຢາເວ,
ກໍເຕັມໄປດ້ວຍເມກປົກຫຸ້ມ.[11]ຈົນພວກພວກປະໂຣຫິດບໍ່ອາດຢືນຢູ່ໄດ້ ເພາະເມກນັ້ນ,
ເພາະພຣະສີຣິຂອງພຣະຢາເວເຕັມພຣະວິຫານຂອງພຣະອົງ.
[12]ແລ້ວໂຊໂລໂມນໄດ້ເວົ້າວ່າ, "ພຣະຢາເວໄດ້ກ່າວວ່າພຣະອົງຈະຢູ່ໃນຄວາມມືດ,[13]ແຕ່ຂ້ານ້ອຍໄດ້ສ້າງທ່ານ ທີ່ຢູ່ສູງສົ່ງ, ສຳລັບພຣະອົງ,
ເປັນສະຖານທີ່ ທີ່ພຣະອົງຈະສະຖິດຢູ່ຕະຫລອດໄປເປັນນິດ."
[14]ແລ້ວກະສັດໄດ້ຫັນມາ ແລະ ໄດ້ອວຍພອນຊຸມນຸມຊົນອິດສະຣາເອນທັງໝົດ, ຂະນະທີ່ຊຸມນຸມຊົນອິດສະຣາເອນທັງໝົດເຂົາກຳລັງຢືນຢູ່.
[15]ທ່ານໄດ້ກ່າວວ່າ, "ສັນລະເສີນພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ຜູ້ທີ່ຊົງສັນຍາກັບດາວິດພໍ່ຂອງຂ້ານ້ອຍ, ແລະ
ໄດ້ເຮັດໃຫ້ສຳເລັດດ້ວຍມືຂອງພຣະອົງເອງ, ໄດ້ກ່າວວ່າ,[16]."ຕັ້ງແຕ່ມື້ທີ່ເຮົາໄດ້ນຳອິດສະຣາເອນປະຊາຊົນຂອງເຮົາອອກມາເອຢິບ,
ເຮົາບໍ່ໄດ້ເລືອກເມືອງໃດຈາກທຸກເຜົ່າໃນອິດສະຣາເອນເພື່ອຈະສ້າງພຣະວິຫານ, ເພື່ອນາມຂອງເຮົາຈະຢູ່ທີ່ນັ້ນ. ຢ່າງໃດກໍດີເຮົາໄດ້ເລືອກດາວິດ
ໃຫ້ເປັນຜູ້ປົກຄອງອິດສະຣາເອນປະຊາຊົນຂອງເຮົາ.'
[17]ບັດນີ້ດາວິດພໍ່ຂອງຂ້ານ້ອຍຈຶ່ງຕັ້ງໃຈທີ່ຈະສ້າງພຣະວິຫານສຳລັບພຣະນາມແຫ່ງພຣະຢາເວ, ພຣະເຈົ້າຂອງອິດສະຣາເອນ.
[18]ແຕ່ພຣະຢາເວໄດ້ກ່າວກັບດາວິດພໍ່ຂອງຂ້ານ້ອຍວ່າ, ‘ທີ່ເຈົ້າໄດ້ຕັ້ງໃຈສ້າງພຣະວິຫານສຳລັບນາມຂອງເຮົານັ້ນ, ເຈົ້າກໍໄດ້ເຮັດດີຢູ່ແລ້ວ
ໃນເລື່ອງຄວາມຕັ້ງໃຈຂອງເຈົ້າ.[19]ຢ່າງໃດກໍດີ ເຈົ້າຈະບໍ່ໄດ້ສ້າງພຣະວິຫານ; ແຕ່ລູກຊາຍຂອງເຈົ້າ, ຜູ້ທີ່ເກີດຈາກເຈົ້າ,
ຂອງຈະສ້າງພຣະວິຫານສຳລັບນາມຂອງເຮົາ.'
[20]ພຣະຢາເວໄດ້ຊົງໃຫ້ພັນທະສັນຍາຂອງພຣະອົງສຳເລັດຕາມທີ່ໄດ້ກ່າວໄວ້ນັ້ນ, ເພາະຂ້ານ້ອຍໄດ້ຂຶ້ນມາແທນທີ່ດາວິດພໍ່ຂອງຂ້ານ້ອຍ, ແລະ
ນັ່ງຢູ່ບັນລັງຂອງອິດສະຣາເອນ, ດັ່ງທີ່ພຣະຢາເວໄດ້ຊົງສັນຍາໄວ້. ຂ້ານ້ອຍໄດ້ສ້າງພຣະວິຫານສຳລັບພຣະນາມຂອງພຣະຢາເວ,
ພຣະເຈົ້າແຫ່ງອິດສະຣາເອນ.[21]ຂ້ານ້ອຍໄດ້ກຳໜົດສະຖານທີ່ວາງຫີບທີ່ນັ້ນ, ທີ່ບັນຈຸພັນທະສັນຍາຂອງພຣະຢາເວໄວ້
ຊຶ່ງພຣະອົງໄດ້ຊົງເຮັດກັບບັນພະບູລຸດຂອງພວກເຮົາ ເມື່ອຊົງນຳເຂົາອອກຈາກແຜ່ນດິນເອຢິບ."
[22]ໂຊໂລໂມນໄດ້ຢືນຢູ່ໜ້າແທ່ນບູຊາຂອງພຣະຢາເວ, ຕໍ່ໜ້າຊຸມນຸມຊົນຂອງອິດສະຣາເອນທັງໝົດ ແລະ
ໄດ້ກາງແຂນຂອງທ່ານອອກສູ່ທ້ອງຟ້າ.[23]ທ່ານໄດ້ເວົ້າວ່າ, "ຂ້າແຕ່ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ,
ບໍ່ມີພະໃດຄືພຣະອົງໃນຟ້າເບື້ອງເທິງ ຫລື ແຜ່ນດິນເບື້ອງລຸ່ມ, ຜູ້ຊົງຮັກສາພັນທະສັນຍາ ດ້ວຍຄວາມສັດຊື່ຕໍ່ຜູ້ຮັບໃຊ້ຂອງພຣະອົງ
ຜູ້ດຳເນີນຢູ່ຕໍ່ໜ້າພຣະອົງດ້ວຍສຸດໃຈ;[24]ພຣະອົງໄດ້ຊົງຮັກສາສັນຍາທີ່ຊົງໄດ້ໃຫ້ໄວ້ກັບດາວິດພໍ່ຂອງຂ້ານ້ອຍ, ຜູ້ຮັບໃຊ້ຂອງພຣະອົງ,
ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ ແມ່ນແລ້ວພຣະອົງໄດ້ກ່າວດ້ວຍປາກ, ແລະ ໄດ້ຊົງໃຫ້ສຳເລັດດ້ວຍມືໃນວັນນີ້.
[25]ບັດນີ້, ຂ້າແຕ່ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ໄດ້ດຳເນີນຕາມທີ່ພຣະອົງໄດ້ໃຫ້ສັນຍາທີ່ໃຫ້ໄວ້ກັບຜູ້ຮັບໃຊ້ຂອງພຣະອົງ
ຄືໃຫ້ກັບດາວິດພໍ່ຂອງຂ້ານ້ອຍ, ເມື່ອພຣະອົງໄດ້ກ່າວວ່າ, ‘ເຈົ້າຈະບໍ່ຂາດຜູ້ຊາຍຜູ້ໜຶ່ງຕໍ່ສາຍຕາເຮົາທີ່ຈະນັ່ງບັນລັງຂອງອິດສະຣາເອນ,
ຖ້າພຽງແຕ່ລູກຫລານຂອງເຈົ້າຈະຮັກສາການເດີນຂອງເຂົາທີ່ຈະດຳເນີນໄປຕໍ່ໜ້າເຮົາດ້ວຍຄວາມລະມັດລະວັງ
ຢ່າງທີ່ເຈົ້າໄດ້ດຳເນີນຕໍ່ໜ້າເຮົານັ້ນ."[26]ບັດນີ້, ຂ້າແຕ່ພຣະເຈົ້າແຫ່ງອິດສະຣາເອນ,
ຂ້ານ້ອຍຂໍໃຫ້ພຣະສັນຍາທີ່ພຣະອົງໄດ້ໃຫ້ໄວ້ກັບຜູ້ຮັບໃຊ້ຂອງພຣະອົງ ຄືດາວິດພໍ່ຂອງຂ້ານ້ອຍ, ເປັນຈິງດ້ວຍເທີນ.
[27]ແຕ່ພຣະເຈົ້າຈະຊົງຢູ່ເທິງແຜ່ນດິນໂລກບໍ? ເບິ່ງແມ, ແມ່ນແຕ່ຈັກກະວານທັງໝົດ ແລະ ຟ້າສະຫວັນທັງສິ້ນຍັງບໍ່ອາດຈະຮອງຮັບພຣະອົງ -
ໄດ້ແລ້ວພຣະວິຫານທີ່ຂ້ານ້ອຍໄດ້ສ້າງຂຶ້ນຈະໃຫຍ່ພໍທີ່ຈະຮອງຮັບພຣະອົງໄດ້ຫລາຍປານໃດ![28]ຂ້າແດ່ພຣະຢາເວ
ຂໍພຣະອົງໂຜດຟັງຄຳພາວັນນາອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ, ແລະ ໃນຄຳອ້ອນວອນຂອງເຂົາ,
ຂ້າແຕ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ; ຂໍຊົງຟັງສຽງຮ້ອງ ແລະ ຄຳອະທິຖານຊຶ່ງຜູ້ຮັບໃຊ້ຂອງພຣະອົງ ອະທິຖານຕໍ່ພຣະອົງໃນວັນນີ້.
[29]ຂໍພຣະອົງທີ່ຈະຊົງເຝົ້າເບິ່ງແຍງດູແລພຣະວິຫານນີ້ທັງກາງເວັນ ແລະ ກາງຄືນ, ຄືສະຖານທີ່ຊຶ່ງພຣະອົງໄດ້ກ່າວວ່າ, ‘ນາມຂອງເຮົາ ແລະ
ເຮົາຈະຢູ່ທີ່ນັ້ນ’ - ເພື່ອພຣະອົງຈະຊົງຟັງຄຳອະທິຖານຊຶ່ງຜູ້ຮັບໃຊ້ຂອງພຣະອົງຈະອະທິຖານໃນສະຖານທີ່ນີ້.[30]ດັ່ງນັ້ນ
ຂໍພຣະອົງຊົງຟັງຄຳອ້ອນວອນຂອງຜູ້ຮັບໃຊ້ຂອງພຣະອົງ ແລະ ຂອງອິດສະຣາເອນປະຊາຊົນຂອງພຣະອົງ
ເມື່ອເຂົາທັງຫລາຍອະທິຖານໃນສະຖານທີ່ນີ້. ແມ່ນ, ພຣະອົງເອງຊົງຟັງຈາກບ່ອນຢູ່ຂອງພຣະອົງຄືຈາກຟ້າ; ແລະ ເມື່ອຊົງຟັງແລ້ວ,
ກໍຊົງອະໄພໂທດບາບ.

31ຖ້າຜູ້ຊາຍຜູ້ຫນຶ່ງເຮັດບາບຕໍ່ເພື່ອນບ້ານຂອງເຂົາ ແລະ ຖືກບັງຄັບໃຫ້ສາບານ, ແລະ
ຖ້າເຂົາມາສາບານຕໍ່ຫນ້າແທ່ນບູຊາຂອງພຣະອົງໃນວິຫານນີ້, 32ຂໍພຣະອົງຊົງຟັງຈາກຟ້າສະຫວັນນັ້ນ ແລະ ຂໍຊົງກະທຳ;
ພິພາກສາເຫລົ່າຜູ້ຮັບໃຊ້ຂອງພຣະອົງ, ໂດຍລົງໂທດຜູ້ເຮັດຜິດ ແລະ ໃຫ້ການກະທຳຂອງເຂົາຕົກລົງເທິງຫົວຂອງເຂົາ, ແລະ
ຕັດສິນວ່າຜູ້ຊອບທຳນັ້ນບໍຣິສຸດໂດຍປະທານລາງວັນໃຫ້ພວກເຂົາຕາມຄວາມຊອບທຳຂອງເຂົາ.
33ເມື່ອອິດສະຣາເອນປະຊາຊົນຂອງພຣະອົງພ່າຍແພ້ສັດຕູ ເພາະໄດ້ເຮັດຜິດບາບຕໍ່ພຣະອົງ, ແລ້ວຖ້າພວກເຂົາຫັນກັບມາຫາພຣະອົງ,
ແລະຍອມຮັບພຣະນາມຂອງພຣະອົງ, ອະທິຖານ, ແລະ ວິງວອນສຳລັບການອະໄພໂທດຈາກພຣະອົງໃນພຣະວິຫານແຫ່ງນີ້
-34ແລ້ວຂໍພຣະຊົງຟັງໃນຟ້າສະຫວັນ ແລະ ຊົງຍົກໂທດບາບຂອງອິດສະຣາເອນປະຊາຊົນຂອງພຣະອົງ; ຂໍຊົງນຳພວກເຂົາກັບມາຍັງແຜ່ນດິນ
ຊຶ່ງພຣະອົງໄດ້ປະທານແກ່ບັນພະບູລຸດຂອງເຂົາທັງຫລາຍ.
35ເມື່ອຟ້າທັງຫລາຍປິດຢູ່ ແລະ ບໍ່ມີຝົນ ເພາະເຂົາທັງຫລາຍໄດ້ເຮັດຜິດບາບຕໍ່ພຣະອົງ - ຖ້າພວກເຂົາໄດ້ອະທິຖານໃນສະຖານທີ່ນີ້,
ແລະຍອມຮັບພຣະນາມຂອງພຣະອົງ, ແລະ ຫັນກັບຈາກການຜິດບາບຂອງພວກເຂົາ ເນື່ອງຈາກວ່າພຣະອົງໄດ້ຊົງລົງໂທດພວກເຂົາ
-36ແລ້ວກໍຂໍຊົງຟັງໃນຟ້າສະຫວັນ ແລະ ຊົງອະໄພບາບຂອງອິດສະຣາເອນຊຶ່ງເປັນຜູ້ຮັບໃຊ້ ແລະ ປະຊາຊົນຂອງພຣະອົງ,
ເມື່ອພຣະອົງຊົງສອນທາງດີຊຶ່ງພວກເຂົາຄວນຈະດຳເນີນໄປ, ຂໍປະທານຝົນຕົກເທິງແຜ່ນດິນຂອງພຣະອົງ,
ຊຶ່ງພຣະອົງປະທານໃຫ້ເປັນມໍລະດົກແກ່ປະຊາຊົນຂອງພຣະອົງ,
37ຖ້າມີການຂາດແຄນອາຫານໃນແຜ່ນດິນ, ຫລື ຖ້າມີໂຣກລະບາດ ຫລື ມີພືດຜົນຖືກທຳລາຍ ຍ້ອນໂຕຫນອນ, ຫລື ຕັກກະແຕນ, ຫລື
ຖ້າສັດຕູໂຈມຕີປະຕູເມືອງໃດໆ ຂອງເຂົາໃນແຜ່ນດິນ, ຫລືມີໄພພິບັດໃດ ຫລື ມີໂຣກໄພໄຂ້ເຈັບເກີດຂຶ້ນ -38ແລະ ຫາກຄຳອະທິຖານ ຫລື
ຄຳວິງວອນຂອງຄົນຫນຶ່ງຄົນໃດ ຫລື ອິດສະຣາເອນປະຊາຊົນທັງຫມົດຂອງພຣະອົງ - ໄດ້ສຳນຶກໃນໃຈຂອງເຂົາເລື່ອງໄພພິບັດ
ໂດຍເດ່ມືຂອງເຂົາອອກສູ່ພຣະວິຫານນີ້.
39ແລ້ວກໍຂໍພຣະອົງຊົງຟັງໃນຟ້າສະຫວັນ, ອັນເປັນທີ່ຢູ່ຂອງພຣະອົງ, ແລະ ຂໍຊົງຍົກໂທດ ແລະ ຊົງກະທຳ, ແລະ
ປະທານລາງວັນແກ່ແຕ່ລະຄົນຕາມການປະພຶດທັງຫມົດຂອງເຂົາ, ຊຶ່ງພຣະອົງ ແລະ ເພາະພຣະອົງເທົ່ານັ້ນຊົງຮູ້ຈິດໃຈຂອງມະນຸດທຸກຄົນ.
40ຊົງເຮັດການນີ້ເພື່ອເຂົາທັງຫລາຍຈະໄດ້ຢຳເກງພຣະອົງ ຕະຫລອດວັນເວລາທີ່ມີຊີວິດເທິງແຜ່ນດິນ
ຊຶ່ງພຣະອົງປະທານໃຫ້ແກ່ບັນພະບູລຸດຂອງພວກຂ້ານ້ອຍ.
41ຍິ່ງກວ່ານັ້ນ, ກ່ຽວກັບຄົນຕ່າງດ້າວ ຜູ້ຊຶ່ງບໍ່ແມ່ນອິດສະຣາເອນປະຊາຊົນຂອງພຣະອົງ: ແຕ່ມາຈາກແດນໄກເນື່ອງຈາກພຣະນາມຂອງພຣະອົງ
-42ເພາະເຂົາທັງຫລາຍຈະໄດ້ຍິນເຖິງພຣະນາມຍິ່ງໃຫຍ່ຂອງພຣະອົງ, ທີ່ເຮັດຕໍ່ປະຊາຊົນຂອງພຣະອົງ ແລ້ວເຂົາມານະມັດສະການ ແລະ
ພາວັນນາອະທິຖານຕໍ່ພຣະອົງທີ່ວິຫານນີ້, 43ແລ້ວກໍຂໍພຣະອົງຊົງຟັງໃນຟ້າສະຫວັນອັນເປັນທີ່ຢູ່ຂອງພຣະອົງ, ແລະ ຂໍຊົງເຮັດຕາມທຸກສິ່ງ
ຊຶ່ງຄົນຕ່າງດ້າວໄດ້ທູນຂໍພຣະອົງ ຂໍຊົງເຮັດເພື່ອຄົນທຸກຊາດແຫ່ງແຜ່ນດິນໂລກຈະຮູ້ຈັກພຣະນາມຂອງພຣະອົງ ແລະ ຢຳເກງພຣະອົງ,
ຄືຊົງເຮັດຕໍ່ອິດສະຣາເອນປະຊາຊົນຂອງພຣະອົງ. ຂໍຊົງເຮັດເພື່ອເຂົາທັງຫລາຍຈະຮູ້ວ່າ
ພຣະວິຫານນີ້ຊຶ່ງຂ້ານ້ອຍໄດ້ສ້າງໄວ້ດ້ວຍພຣະນາມຂອງພຣະອົງ.
44ຖ້າປະຊາຊົນຂອງພຣະອົງອອກໄປຕໍ່ສູ້ກັບສັດຕູ ໂດຍທາງໃດໆ ທີ່ພຣະອົງຊົງໃຊ້ພວກເຂົາອອກໄປກໍຕາມ ແລະ
ເຂົາທັງຫລາຍໄດ້ອະທິຖານຕໍ່ພຣະອົງ, ພຣະຢາເວ, ໄປຍັງເມືອງຊຶ່ງພຣະອົງໄດ້ເລືອກສັນໄວ້, ແລະ
ໄປຍັງພຣະວິຫານທີ່ຂ້ານ້ອຍໄດ້ສ້າງເພື່ອພຣະນາມຂອງພຣະອົງ. 45ແລ້ວກໍຂໍພຣະອົງຊົງຟັງຄຳອະທິຖານ ແລະ
ຄຳອ້ອນວອນຂອງພວກເຂົາໃນຟ້າສະຫວັນ, ແລະ ຂໍຄວາມຊ່ວຍເຫລືອແກ່ພວກເຂົາ.
46ຖ້າເຂົາທັງຫລາຍເຮັດຜິດບາບຕໍ່ພຣະອົງ, ເພາະບໍ່ມີມະນຸດຄົນໃດບໍ່ໄດ້ເຮັດຜິດບາບ, ແລະພຣະອົງໂກດຮ້າຍພວກເຂົາ ແລະ
ຊົງມອບເຂົາໄວ້ກັບສັດຕູ, ດັ່ງນັ້ນພວກສັດຕູນຳພວກເຂົາໄປ ແລ້ວພວກເຂົາກໍຖືກຈັບໄປເປັນຊະເລີຍທີ່ແຜ່ນດິນຂອງສັດຕູນັ້ນ, ບໍ່ວ່າໄກ ຫລື ໃກ້.
47ແລ້ວຖ້າເຂົາສຳນຶກຜິດໃນແຜ່ນດິນທີ່ເຂົາຖືກຈັບໄປເປັນຊະເລີຍ, ແລະ ໄດ້ກັບໃຈ
ແລ້ວຂໍຄວາມເມດຕາຕໍ່ພຣະອົງໃນແຜ່ນດິນທີ່ພວກເຂົາຖືກຈັບໄປເປັນຊະເລີຍທູນວ່າ, ‘ຂ້ານ້ອຍທັງຫລາຍໄດ້ເຮັດຄວາມຜິດຮຸນແຮງ ແລະ
ເຮັດບາບ ຂ້ານ້ອຍທັງຫລາຍໄດ້ປະພຶດຢ່າງຊົ່ວຮ້າຍ.'
48ຖ້າເຂົາທັງຫລາຍກັບມາຫາພຣະອົງດ້ວຍສຸດຈິດສຸດໃຈ ໃນແຜ່ນດິນແຫ່ງສັດຕູຈັບເຂົາໄປເປັນຊະເລີຍ, ແລະ
ຖ້າເຂົາອະທິຖານຕໍ່ພຣະອົງໄປຍັງແຜ່ນດິນຂອງພວກເຂົາ, ຊຶ່ງພຣະອົງປະທານແກ່ບັນພະບູລຸດຂອງເຂົາທັງຫລາຍ, ແລະ ໄປຍັງເມືອງທີ່ພ
ຣະອົງຊົງເລືອກສັນໄວ້, ແລະ ພຣະວິຫານທີ່ຂ້ານ້ອຍໄດ້ສ້າງເພື່ອພຣະນາມຂອງພຣະອົງແລ້ວ.
49ແລ້ວກໍຂໍພຣະອົງຊົງຟັງຄຳອະທິຖານ, ແລະ ຄຳອ້ອນວອນເພື່ອຂໍຄວາມຊ່ວຍເຫລືອ, ຂອງພວກເຂົາໃນຟ້າສະຫວັນ ອັນເປັນທີ່ຢູ່ຂອງພຣະອົງ
ແລະ ຂໍປະທານຄວາມຍຸດຕິທຳແກ່ພວກເຂົາ. 50ຂໍຊົງຍົກໂທດໃຫ້ປະຊາຊົນຂອງພຣະອົງຜູ້ເຮັດບາບຊຶ່ງຝ່າຝືນຕໍ່ຄຳສັ່ງຂອງພຣະອົງ, ແລະ
ຊົງຍົກໂທດຕໍ່ການທໍລະຍົດທີ່ເຂົາທັງຫລາຍໄດ້ເຮັດຕໍ່ພຣະອົງ.
ຂໍໃຫ້ພຣະອົງປະທານຄວາມເມດຕາຕໍ່ເຂົາກ່ອນທີ່ສັດຕູຈັບພວກເຂົາໄປເປັນຊະເລີຍ, ເພື່ອສັດຕູຈະໄດ້ເມດຕາປະຊາຊົນຂອງພຣະອົງດ້ວຍ.
51ພວກເຂົາເປັນປະຊາຊົນຂອງພຣະອົງຊຶ່ງພຣະອົງໄດ້ຊົງເລືອກ. ຊຶ່ງພຣະອົງຊົງຊ່ວຍກູ້ອອກມາຈາກເອຢິບ
ຄືອອກຈາກທ່າມກາງເຕົາຊຶ່ງເຫລັກຖືກຫລອມ.
52ຂ້ານ້ອຍອະທິຖານຂໍໃຫ້ພຣະອົງຊົງຫລຽວເບິ່ງປະຊາຊົນອິດສະຣາເອນຕໍ່ຄຳອ້ອນວອນຂອງຜູ້ຮັບໃຊ້ຂອງພຣະອົງ ແລະ
ຕໍ່ຄຳອ້ອນວອນຂອງອິດສະຣາເອນປະຊາຊົນຂອງພຣະອົງ, ຂໍຊົງຟັງເມື່ອໃດກໍຕາມທີ່ເຂົາທັງຫລາຍຮ້ອງຕໍ່ພຣະອົງ.
53ເພາະພຣະອົງຊົງແຍກພວກເຂົາອອກຈາກທ່າມກາງຊົນທຸກຊາດແຫ່ງແຜ່ນດິນໂລກ ໃຫ້ເປັນສົມບັດຂອງພຣະອົງ
ແລະຮັບພຣະສັນຍາຂອງພຣະອົງ, ຕາມທີ່ພຣະອົງໄດ້ກ່າວທາງໂມເຊຜູ້ຮັບໃຊ້ຂອງພຣະອົງ,
ເມື່ອພຣະອົງຊົງນຳບັນພະບູລຸດຂອງຂ້ານ້ອຍທັງຫລາຍອອກຈາກເອຢິບ, ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ."
54ດັ່ງນັ້ນເມື່ອໂຊໂລໂມນຊົງຈົບຄຳອະທິຖານ ແລະ ຄຳອ້ອນວອນທັງຫມົດນີ້ຕໍ່ພຣະຢາເວແລ້ວ,
ທ່ານໄດ້ລຸກຂຶ້ນຈາກຫນ້າແທ່ນບູຊາຂອງພຣະຢາເວ, ຈາກທີ່ຄຸເຂົ່າພ້ອມກັບຍົກມືຂຶ້ນສູ່ຟ້າ. 55ທ່ານໄດ້ຢືນ ແລະ
ໄດ້ຊົງອວຍພອນແກ່ຊຸມນຸມອິດສະຣາເອນດ້ວຍສຽງດັ່ງວ່າ, 56“ສັນລະເສີນພຣະຢາເວ,

 generated on Tue Jun 17 19:01:42 2025

ຜູ້ປະທານຄວາມສະຫງົບສຸກແກ່ອິດສະຣາເອນປະຊາຊົນຂອງພຣະອົງ, ຕາມທີ່ຊົງສັນຍາໄວ້ທຸກປະການ.
ພຣະສັນຍາອັນດີທັງຫມົດຂອງພຣະອົງຊຶ່ງຊົງສັນຍາທາງໂມເຊຜູ້ຮັບໃຊ້ຂອງພຣະອົງນັ້ນບໍ່ຜິດພາດຈັກຄຳດຽວ.
[57]ຂໍພຣະຢາເວພຣະເຈົ້າຂອງເຮົາທັງຫລາຍສະຖິດກັບພວກເຮົາຄືຢ່າງທີ່ພຣະອົງໄດ້ສະຖິດກັບບັນພະບູລຸດຂອງເຮົາ. ຂໍຢ່າຊົງປ່ອຍເຮົາ ຫລື
ຖິ້ມພວກເຮົາເລີຍ,[58]ແຕ່ຂໍພຣະອົງໂນ້ມຈິດໃຈຂອງພວກເຮົາໃຫ້ມາຫາພຣະອົງ ເພື່ອດຳເນີນໃນທາງທັງຫມົດຂອງພຣະອົງ ແລະ
ຮັກສາພຣະບັນຍັດກົດເກນ ແລະ ກົດຫມາຍຂອງພຣະອົງ, ຊຶ່ງພຣະອົງໄດ້ຊົງບັນຊາໄວ້ແກ່ບັນພະບູລຸດຂອງພວກເຮົາ.
[59]ຂໍໃຫ້ຖ້ອຍຄຳເຫລົ່ານີ້ທີ່ຂ້ານ້ອຍໄດ້ອ້ອນວອນ, ຕໍ່ພຣະຢາເວຢູ່ໃກ້, ພຣະຢາເວພຣະເຈົ້າຂອງພວກເຮົາທັງວັນແລະຄືນ, ແລະ
ຂໍຊົງຊ່ວຍຜູ້ຮັບໃຊ້ຂອງພຣະອົງ ແລະ ແກ່ອິດສະຣາເອນປະຊາຊົນຂອງພຣະອົງ, ຕາມນ້ຳພຣະໄທຂອງພຣະອົງ
ຕາມຄວາມຈຳເປັນໃນແຕ່ລະມື້;[60]ເພື່ອຊົນທຸກຊາດແຫ່ງແຜ່ນດິນໂລກຈະຮູ້ວ່າພຣະຢາເວນັ້ນ ຊົງເປັນພຣະເຈົ້າ, ບໍ່ມີພະອື່ນເລີຍ!
[61]ເພາະສະນັ້ນຂໍໃຫ້ຈິດໃຈຂອງທ່ານທັງຫລາຍສັດຊື່ຕໍ່ພຣະຢາເວພຣະເຈົ້າຂອງພວກເຮົາ, ຄືດຳເນີນຢູ່ໃນກົດເກນຂອງພຣະອົງ ແລະ
ຮັກສາພຣະບັນຍັດຂອງພຣະອົງດັ່ງໃນມື້ນີ້."
[62]ແລ້ວກະສັດ ແລະ ຄົນອິດສະຣາເອນທັງຫມົດທີ່ຢູ່ກັບທ່ານ ໄດ້ຖວາຍເຄື່ອງບູຊາແດ່ພຣະຢາເວ.
[63]ໂຊໂລໂມນໄດ້ຖວາຍເຄື່ອງບູຊາເປັນເຄື່ອງຖວາຍເພື່ອຄວາມສາມັກຄີທຳຊຶ່ງທ່ານໄດ້ຖວາຍແດ່ພຣະຢາເວ; ຄືງົວສອງຫມື່ນສອງພັນໂຕ ແລະ
ແກະຫນຶ່ງຮ້ອຍຊາວພັນໂຕ. ດັ່ງນັ້ນກະສັດ ແລະ ປະຊາຊົນອິດສະຣາເອນທັງຫມົດຈຶ່ງໄດ້ອຸທິດຖວາຍພຣະວິຫານຂອງພຣະຢາເວ.
[64]ໃນມື້ດຽວກັນນັ້ນ ກະສັດຊົງເຮັດພິທີຊຳລະສ່ວນກາງຂອງເດີ່ນຫຍ້າ ຊຶ່ງຢູ່ຫນ້າພຣະວິຫານຂອງພຣະຢາເວ,
ເພາະວ່າທ່ານໄດ້ໃຊ້ທີ່ນັ້ນຖວາຍເຄື່ອງເຜົາບູຊາ, ຖວາຍພືດຜົນເປັນເມັດ ແລະ ຖວາຍໄຂມັນຂອງສັດໃຫ້ເປັນເຄື່ອງບູຊາ,
ເພາະວ່າແທ່ນທອງສຳຣິດຊຶ່ງຢູ່ຕໍ່ຫນ້າພຣະຢາເວນັ້ນ ນ້ອຍເກີນກວ່າຈະຮັບເຄື່ອງເຜົາບູຊາ, ພືດຜົນ ແລະ ໄຂມັນຂອງສັດໄດ້.
[65]ດັ່ງນັ້ນໂຊໂລໂມນຈຶ່ງໄດ້ຈັດສະຫລອງງານລ້ຽງໃນເວລານັ້ນ, ພ້ອມກັບອິດສະຣາເອນທັງຫມົດ, ເປັນການຊຸມນຸມໃຫຍ່,
ສະເພາະຫນ້າພຣະຢາເວພຣະເຈົ້າຂອງເຮົາທັງເຈັດມື້ ແລະ ຕໍ່ອີກເຈັດມື້ເປັນສິບສີ່ມື້.[66]ໃນມື້ທີແປດ ທ່ານໄດ້ຊົງໃຫ້ປະຊາຊົນເມືອບ້ານ, ແລະ
ພວກເຂົາທັງຫລາຍກໍໄດ້ຖວາຍພຣະພອນແດ່ກະສັດ ແລະ ກັບໄປບ້ານຂອງຕົນດ້ວຍຈິດໃຈຊື່ນບານ ແລະ ຍິນດີ
ເນື່ອງຈາກຄວາມດີທັງຫມົດຊຶ່ງພຣະຢາເວໄດ້ສຳແດງແກ່ດາວິດ, ຜູ້ຮັບໃຊ້ຂອງພຣະອົງ, ແລະ ແກ່ອິດສະຣາເອນປະຊາຊົນຂອງພຣະອົງ.


generated on Tue Jun 17 19:01:42 2025

9 1 ຫລັງຈາກໂຊໂລໂມນໄດ້ສ້າງພຣະວິຫານຂອງພຣະຢາເວ ແລະ ສ້າງຣາຊວັງຂອງກະສັດ, ລວມທັງທຸກສິ່ງທີ່ທ່ານມີຄວາມຕັ້ງໃຈນັ້ນ
ທ່ານໄດ້ສ້າງສຳເລັດແລ້ວ, 2 ພຣະຢາເວໄດ້ຊົງປາກົດຕໍ່ໂຊໂລໂມນເປັນເທື່ອທີສອງ, ຄືຢ່າງທີ່ພຣະອົງຊົງປາກົດແກ່ທ່ານທີ່ເມືອງກິເບໂອນ.

3 ແລ້ວພຣະຢາເວໄດ້ກ່າວແກ່ເພິ່ນວ່າ, "ເຮົາໄດ້ຍິນຄຳອະທິຖານ ແລະ ຄຳອ້ອນວອນຂອງເຈົ້າ ຊຶ່ງເຈົ້າໄດ້ອ້ອນວອນຕໍ່ເຮົານັ້ນ.
ແລ້ວເຮົາໄດ້ຊຳລະວິຫານນີ້ທີ່ເຈົ້າໄດ້ສ້າງໃຫ້ບໍຣິສຸດສຳລັບເຮົາເອງ, ແລະ ໄດ້ໃສ່ນາມຂອງເຮົາທີ່ນັ້ນຕະຫລອດໄປ, ຕາຂອງເຮົາ ແລະ
ຫົວໃຈຂອງເຮົາຈະຢູ່ທີ່ນັ້ນຕະຫລອດເວລາ.
4 ແລະ ສ່ວນເຈົ້າ, ຖ້າເຈົ້າດຳເນີນຕໍ່ຫນ້າເຮົາເຫມືອນຢ່າງດາວິດພໍ່ຂອງເຈົ້າໄດ້ດຳເນີນ ດ້ວຍໃຈຊື່ສັດ ແລະ ດ້ວຍຄວາມທ່ຽງທຳ, ແລະ
ເຮັດທຸກຢ່າງຕາມທີ່ເຮົາບັນຊາເຈົ້າໄວ້ ແລະ ທັງຮັກສາກົດເກນ ແລະ ກົດຫມາຍຂອງເຮົາ,
5 ແລ້ວເຮົາຈະສະຖາປະນາຣາຊບັນລັງແຫ່ງອານາຈັກຂອງເຈົ້າປົກຄອງອິດສະຣາເອນຕະຫລອດໄປ, ດັ່ງທີ່ເຮົາໄດ້ກ່າວກັບດາວິດພໍ່ຂອງເຈົ້າວ່າ,
"ເຈົ້າຈະບໍ່ຂາດຜູ້ສືບເຊື້ອສາຍທີ່ຈະນັ່ງເທິງບັນລັງແຫ່ງອິດສະຣາເອນ".
6 ແຕ່ຫາກເຈົ້າທັງຫລາຍ ຫລື ລູກຫລານຫັນໄປຈາກການຕິດຕາມເຮົາ, ແລະ ບໍ່ໄດ້ຮັກສາພຣະບັນຍັດ ແລະ ກົດເກນຂອງເຮົາ,
ຊຶ່ງເຮົາໄດ້ຕັ້ງໄວ້ຕໍ່ຫນ້າພວກເຈົ້າ, ແລະ ໄປນະມັດສະການພະອື່ນໆ ແລະ ກົ້ມກາບພະເຫລົ່ານັ້ນ.
7 ແລ້ວເຮົາຈະຕັດປະຊາຊົນອິດສະຣາເອນອອກຈາກແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່ພວກເຂົາ; ແລະ
ເຮົາຈະປະຖິ້ມວິຫານຊຶ່ງເຮົາເຮັດໃຫ້ບໍຣິສຸດເພື່ອນາມຂອງເຮົາໄປຈາກສາຍຕາຂອງເຮົາ, ແລະ ປະຊາຊົນອິດສະຣາເອນຈະຖືກດູຖູກ ແລະ
ຫມິ່ນປະຫມາດໃນຫມູ່ຊົນຊາດທັງຫລາຍ.
8 ວິຫານນີ້ຈະກາຍເປັນກອງສິ່ງຮັກຮ້າງພັງເພ, ແລະ ທຸກຄົນທີ່ຜ່ານໄປຈະປະຫລາດໃຈ ແລະ ເຂົາຈະເຢາະເຢີ້ຍ ແລະ ພວກເຂົາຈະເວົ້າວ່າ,
"ເປັນຫຍັງພຣະຢາເວຈຶ່ງເຮັດແບບນີ້ແກ່ແຜ່ນດິນນີ້ ແລະພຣະວິຫານນີ້?" 9 ແລ້ວພວກຄົນທັງຫລາຍກໍຈະຕອບວ່າ,
'ເພາະເຂົາທັງຫລາຍໄດ້ປະຖິ້ມພຣະຢາເວພຣະເຈົ້າຂອງເຂົາ, ຜູ້ໄດ້ຊົງນຳບັນພະບູລຸດຂອງພວກເຂົາອອກຈາກແຜ່ນດິນເອຢິບ, ແລະ
ໄດ້ໄປຢຶດຖືພະອື່ນ ທັງໄດ້ກົ້ມກາບ ແລະນະມັດສະການພະອື່ນໆເຫລົ່ານັ້ນ. ເພາະສະນັ້ນ
ພຣະຢາເວໄດ້ຊົງນຳໄພພິບັດທັງຫມົດນີ້ມາສູ່ພວກເຂົາທັງຫລາຍ.""
10 ຕໍ່ມາເມື່ອທ້າຍປີທີຊາວ ທີ່ໂຊໂລໂມນໄດ້ສ້າງອາຄານສອງຫລັງ, ຄືພຣະວິຫານຂອງພຣະຢາເວ ແລະ ຣາຊວັງຂອງກະສັດ. 11 ບັດນີ້ ຮີຣາມ,
ກະສັດແຫ່ງຕີເຣຈຶ່ງໄດ້ສົ່ງໄມ້ແປກ, ໄມ້ສົນ ແລະ ທອງຄຳໃຫ້ໂຊໂລໂມນ, ດັ່ງນັ້ນກະສັດໂຊໂລໂມນໄດ້ໃຊ້ຕົບແຕ່ງຕາມທີ່ຕ້ອງການ-
ແລ້ວກະສັດໂຊໂລໂມນກໍປະທານເມືອງໃນແຜ່ນດິນຄາລີເລ ໃຫ້ກະສັດຮີຣາມຊາວເມືອງ.
12 ຮີຣາມໄດ້ໄປຈາກເມືອງຕີເຣເພື່ອກວດກາເບິ່ງເມືອງທີ່ໂຊໂລໂມນໄດ້ປະທານໃຫ້ແກ່ເພິ່ນ, ແຕ່ເມືອງເຫລົ່ານັ້ນບໍ່ເປັນທີ່ພໍໃຈເພິ່ນ.
13 ດັ່ງນັ້ນຮີຣາມຈຶ່ງໄດ້ເວົ້າວ່າ, "ນ້ອງຊາຍເອີຍ ເມືອງທີ່ທ່ານໃຫ້ເຮົານັ້ນ, ຄືເປັນເມືອງຫຍັງແບບນີ້?" ເພິ່ນຈຶ່ງເອີ້ນເມືອງເຫລົ່ານັ້ນວ່າ
ແຜ່ນດິນກາບູນ, ຊຶ່ງພວກເຂົາຍັງຄົງເອີ້ນຈົນຮອດທຸກມື້ນີ້. 14 ຮີຣາມໄດ້ສົ່ງທອງຄຳຫນັກ 120 ຕະລັນແກ່ກະສັດໂຊໂລໂມນ.
15 ຕໍ່ໄປນີ້ເລື່ອງຂອງການຈັດຫາແຮງງານຊຶ່ງກະສັດໂຊໂລໂມນໄດ້ໃຫ້ມາສ້າງພຣະວິຫານຂອງພຣະຢາເວ ແລະ ຣາຊວັງຂອງເພິ່ນເອງ,
ທັງຖົມດິນຢູ່ທາງທິດຕາເວັນອອກຂອງເມືອງ, ສ້າງກຳແພງເມືອງນະຄອນເຢຣູຊາເລັມ, ແລະ ສ້າງທີ່ປ້ອງກັນເມືອງຮາໂຊ, ເມືອງເມກິດໂດ,
ແລະເມືອງເກເຊ. 16 ກະສັດແຫ່ງເອຢິບໄດ້ຍົກທັບຂຶ້ນມາ ແລະ ຢຶດເມືອງເກເຊ. ເພິ່ນໄດ້ເອົາໄຟເຜົາ ທັງໄດ້ຂ້າຄົນຊຶ່ງຢູ່ໃນເມືອງນັ້ນ.
ແລ້ວໄດ້ຍົກເມືອງນັ້ນໃຫ້ເປັນຂອງຂວັນແກ່ລູກສາວຂອງເພິ່ນຊຶ່ງເປັນເມຍຂອງໂຊໂລໂມນ.
17 ດັ່ງນັ້ນໂຊໂລໂມນຈຶ່ງໄດ້ສ້າງເມືອງເກເຊຂຶ້ນໃຫມ່ ແລະ ສ້າງເມືອງເບັດໂຮໂຣນເບື້ອງລຸ່ມ, 18 ເມືອງບາອາລາດ ແລະ
ເມືອງຕາມາໃນຖິ່ນແຫ້ງແລ້ງກັນດານ ໃນແຜ່ນດິນຢູດາຍນັ້ນ, 19 ທັງບັນດາເມືອງສຳລັບໄວ້ສະບຽງອາຫານທີ່ໂຊໂລໂມນມີຢູ່, ແລະ
ເມືອງທັງຫລາຍສຳລັບລົດມ້າຮົບຂອງເພິ່ນ, ແລະ ເມືອງທັງຫລາຍສຳລັບມ້າຂອງເພິ່ນ ແລະ ສິ່ງໃດໆ
ທີ່ເພິ່ນຢາກຈະສ້າງໃນນະຄອນເຢຣູຊາເລັມ, ໃນເລບານອນ ແລະ ທົ່ວແຜ່ນດິນພາຍໃຕ້ການປົກຄອງຂອງເພິ່ນ.
20 ສຳລັບກຸ່ມຄົນຜູ້ທີ່ເຫລືອຢູ່ຈາກ ຄົນອາໂມຣິດ, ຮິດຕີ, ຄົນເພີຣິຊິດ, ຊາວຮີວີ, ແລະ ຊາວຢາບຸດ, ຜູ້ທີ່ບໍ່ແມ່ນຄົນ ອິດສະຣາເອນ,
21 ເຊື້ອສາຍຂອງພວກເຂົາທີ່ເຫລືອຢູ່ໃນແຜ່ນດິນ, ຊຶ່ງປະຊາຊົນອິດສະຣາເອນບໍ່ສາມາດຈະທຳລາຍໃຫ້ຫມົດໄດ້ -
ໂຊໂລໂມນກໍໄດ້ເກນໃຫ້ເປັນທາດແຮງງານຢູ່ຈົນມື້ນີ້.
22 ຢ່າງໃດກໍຕາມ, ແຕ່ປະຊາຊົນອິດສະຣາເອນນັ້ນ. ໂຊໂລໂມນບໍ່ໄດ້ໃຫ້ເປັນທາດ, ເພາະເຂົາທັງຫລາຍເປັນທະຫານ, ຂ້າຣາຊການ,
ຜູ້ບັນຊາກອງທັບ, ຜູ້ບັງຄັບກອງລົດຮົບ ແລະທະຫານມ້າຂອງເພິ່ນ.
23 ເຫລົ່ານີ້ເປັນຫົວຫນ້າຂ້າຣາຊການ ຄວບຄຸມຄົນງານທີ່ສ້າງອາຄານຕ່າງໆ, ຜູ້ທີ່ເຮັດວຽກໃຫ້ຊາໂລໂມນ, ຈຳນວນຫ້າຮ້ອຍຫ້າສິບຄົນ,
ພວກເຂົາເປັນຄົນເບິ່ງແຍງປະຊາຊົນທີ່ເຮັດວຽກ.
24 ລູກສາວຂອງຟາໂຣ ໄດ້ຍ້າຍຂຶ້ນມາຈາກນະຄອນດາວິດ ມາຢູ່ວັງທີ່ໂຊໂລໂມນໄດ້ສ້າງແກ່ນາງ.
ແລ້ວໂຊໂລໂມນຈຶ່ງໄດ້ຖົມດິນຢູ່ທາງທິດຕາເວັນອອກຂອງເມືອງ.
25 ໂຊໂລໂມນໄດ້ຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາເທິງແທ່ນບູຊາປີລະສາມຄັ້ງ, ຊຶ່ງເພິ່ນໄດ້ສ້າງຖວາຍພຣະຢາເວ,
ທັງເຜົາບັນດາເຄື່ອງຫອມເທິງແທ່ນບູຊາ ຖວາຍຕໍ່ຫນ້າພຣະຢາເວ. ດັ່ງນັ້ນເພິ່ນຈຶ່ງໄດ້ສ້າງພຣະວິຫານຈົນສຳເລັດ.
26 ກະສັດໂຊໂລໂມນໄດ້ສ້າງກອງທັບເຮືອທີ່ເມືອງເອຊີໂອນເກເບ, ຊຶ່ງຢູ່ໃກ້ເມືອງເອລາດ, ຢູ່ແຄມຝັ່ງຂອງອ່າວອາກາບາ ທະເລແດງ,
ໃນແຜ່ນດິນເອໂດມ. 27 ຮີຣາມໄດ້ສົ່ງທະຫານທີ່ຊ່ຽວຊານຈາກກອງທັບເຮືອຂອງເພິ່ນພ້ອມກັບທະຫານຂອງກະສັດໂຊໂລໂມນ.
28 ເຂົາທັງຫລາຍໄດ້ໄປຮອດເມືອງໂອເຟຍ ພ້ອມກັບທະຫານຂອງໂຊໂລໂມນ ແລະ ນຳທອງຄຳຈາກທີ່ນັ້ນຈຳນວນ 420 ຕະລັນ
ກັບມາຖວາຍກະສັດໂຊໂລໂມນ.


generated on Tue Jun 17 19:01:42 2025

10 [1]ເມື່ອຣາຊິນີແຫ່ງເຊບາ ໄດ້ຍິນເຖິງຊື່ສຽງຂອງກະສັດໂຊໂລໂມນ ເນື່ອງຈາກພຣະນາມຂອງພຣະຢາເວ,
ຣາຊິນີຈຶ່ງເດີນທາງມາເພື່ອທົດສອບດ້ວຍປັນຫາຫຍຸ້ງຍາກຫລາຍຢ່າງ.
[2]ນາງໄດ້ມານະຄອນເຢຣູຊາເລັມພ້ອມດ້ວຍບໍລິວານຢ່າງຫລວງຫລາຍມານຳ, ພ້ອມທັງບັນທຸກເຄື່ອງເທດຕ່າງໆ, ທອງຄຳ, ແລະ
ເພັດພອຍລໍ້າຄ່າຫລວງຫລາຍ. ເມື່ອນາງມາຮອດ, ນາງໄດ້ທູນໂຊໂລໂມນເລື່ອງໃນໃຈຂອງນາງທຸກຢ່າງ.

[3]ໂຊໂລໂມນໄດ້ຕອບບັນຫາທຸກຂໍ້ຂອງນາງ. ບໍ່ມີສິ່ງໃດທີ່ນາງໄດ້ທູນຖາມກະສັດແລ້ວບໍ່ໄດ້ຄຳຕອບ.
[4]ເມື່ອຣາຊິນີແຫ່ງເຊບາເຫັນສະຕິປັນຍາທັງຫມົດຂອງໂຊໂລໂມນ, ແລະຣາຊວັງທີ່ໂຊໂລໂມນໄດ້ສ້າງ,[5]ທັງອາຫານທີ່ໂຕະກິນເຂົ້າ,
ກັບບ່ອນນັ່ງຂອງບັນດາຂ້າຣາຊການ, ແລະ ການຮັບໃຊ້ຂອງພວກຄົນຮັບໃຊ້ຂອງເພິ່ນ, ຕະຫລອດຈົນຮອດເຄື່ອງແຕ່ງກາຍຂອງພວກເຂົາ;
ທັງພະນັກງານເຊີນຖ້ວຍສະເຫວີຍຂອງເພິ່ນ ລວມທັງລັກສະນະທີ່ເພິ່ນໄດ້ຖວາຍເຄື່ອງເຜົາບູຊາທີ່ພຣະວິຫານຂອງພຣະຢາເວ, ນາງກໍ່ງຶດງໍ້ ແລະ
ປະຫລາດໃຈຫລາຍ.
[6]ຣາຊິນີຈຶ່ງໄດ້ກ່າວແກ່ກະສັດວ່າ, "ຄຳເລົ່າລືທີ່ຂ້ານ້ອຍໄດ້ຍິນທີ່ໃນປະເທດຂອງຂ້ານ້ອຍເອງ ກ່ຽວກັບທ່ານ ແລະ
ສະຕິປັນຍາຂອງທ່ານນັ້ນລ້ວນແຕ່ເປັນຄວາມຈິງ.[7]ແຕ່ຂ້ານ້ອຍບໍ່ໄດ້ເຊື່ອໃນສິ່ງທີ່ຂ້ານ້ອຍໄດ້ຍິນ, ຈົນໄດ້ມາຫາດ້ວຍຕົນເອງ ແລະ ບັດນີ້
ຕາຂອງຂ້ານ້ອຍໄດ້ເຫັນແລ້ວ. ທີ່ຄົນອື່ນໄດ້ບອກແກ່ຂ້ານ້ອຍກໍບໍ່ຮອດເຄິ່ງຫນຶ່ງຂອງສະຕິປັນຍາ ແລະ ຄວາມຮັ່ງມີຂອງທ່ານ!
ທ່ານມີຊື່ສຽງຫລາຍກວ່າຂ່າວທີ່ຂ້ານ້ອຍໄດ້ຍິນມາ.
[8]ບັນດາຄົນຂອງທ່ານ, ແລະ ພວກຮັບໃຊ້ຂອງທ່ານ ຄືຜູ້ທີ່ຄອຍປົນນິບັດຕໍ່ຫນ້າທ່ານເປັນປະຈຳ, ເພາະພວກເຂົາໄດ້ຟັງສະຕິປັນຍາຂອງທ່ານ.
[9]ສັນລະເສີນແດ່ພຣະຢາເວພຣະເຈົ້າຂອງທ່ານ, ຜູ້ຊົງພໍໃຈໃນໂຕທ່ານ ແລະໄດ້ວາງທ່ານໄວ້ເທິງບັນລັງແຫ່ງອິດສະຣາເອນ,
ເພາະພຣະຢາເວໄດ້ຮັກອິດສະຣາເອນຕະຫລອດໄປ ພຣະອົງຈຶ່ງໄດ້ແຕ່ງຕັ້ງໃຫ້ທ່ານເປັນກະສັດ, ເພື່ອຈະຮັກສາກົດບັນຍັດ ແລະ
ຄວາມຍຸດຕິທຳໄວ້!"
[10]ແລ້ວຣາຊິນີກໍຖວາຍທອງຄຳຫນັກ 120 ຕະລັນແກ່ກະສັດ ທັງເຄື່ອງເທດ ແລະ ເພັດພອຍອັນລ້ຳຄ່າຢ່າງຫລວງຫລາຍ.
ບໍ່ເຄີຍມີໃຜເອົາເຄື່ອງເທດຢ່າງຫລວງຫລາຍແບບນີ້ຄືຣາຊິນີແຫ່ງເຊບາໄດ້ຖວາຍແກ່ກະສັດໂຊໂລໂມນອີກເລີຍ.
[11]ກອງທັບເຮືອຂອງຮີຣາມ, ທີ່ໄດ້ບັນທຸກທອງຄຳມາຈາກໂອເຟຍ, ກໍໄດ້ນຳເອົາໄມ້ຈັນ
ແລະເພັດພອຍອັນລ້ຳຄ່າຢ່າງຫລວງຫລາຍມາຈາກໂອເຟຍດ້ວຍ.[12]ກະສັດໄດ້ໃຊ້ໄມ້ຈັນເຮັດເສົາສຳລັບພຣະວິຫານຂອງພຣະຢາເວ ແລະ
ສຳລັບຣາຊວັງຂອງກະສັດ, ແລະ ເຮັດພິນນ້ອຍ ແລະ ພິນໃຫຍ່ສຳລັບພວກນັກຮ້ອງ.
ຈົນທຸກມື້ນີ້ກໍບໍ່ເຄີຍມີໄມ້ຈັນເຂົ້າມາໃຫ້ເຫັນຢ່າງຫລວງຫລາຍແບບນີ້ອີກເລີຍ.
[13]ກະສັດໂຊໂລໂມນໄດ້ປະທານແກ່ຣາຊິນີແຫ່ງເຊບາໃນທຸກສິ່ງຢ່າງທີ່ນາງຕ້ອງການ, ຕາມທີ່ນາງທູນຂໍ,
ນອກຈາກສິ່ງທີ່ໂຊໂລໂມນໄດ້ປະທານແກ່ນາງດ້ວຍໃຈອັນກ້ວາງຂວາງຂອງເພິ່ນ. ດັ່ງນັ້ນຣາຊິນີກໍກັບໄປແຜ່ນດິນຂອງຕົນເອງ
ພ້ອມທັງຄະນະຜູ້ຕິດຕາມຂອງນາງ.
[14]ບັດນີ້ ນ້ຳຫນັກຂອງທອງຄຳທີ່ໄດ້ນຳມາຖວາຍໂຊໂລໂມນໃນປີຫນຶ່ງເປັນທອງຄຳຫນັກຮອດ 666 ຕະລັນ,
[15]ນອກຈາກທອງຄຳຊຶ່ງມາຈາກພວກຄົນຄ້າຂາຍ ແລະ ຈາກສິນຄ້າຂອງພວກພໍ່ຄ້າ. ຈາກບັນດາກະສັດແຫ່ງອາຣາເບຍທັງຫມົດ ແລະ
ຈາກບັນດາເຈົ້າເມືອງຕ່າງໆໃນປະເທດກໍໄດ້ນຳເຄື່ອງທອງ ແລະ ເຄື່ອງເງິນມາຖວາຍແກ່ໂຊໂລໂມນ.
[16]ກະສັດໂຊໂລໂມນໄດ້ເຮັດໂລ້ໃຫຍ່ສອງຮ້ອຍອັນຈາກທອງຄຳ. ໂລ້ຫົກຮ້ອຍອັນແຕ່ລະອັນໃຊ້ທອງຄຳເຮັດ.
[17]ເພິ່ນໄດ້ເຮັດໂລ້ນ້ອຍສາມຮ້ອຍອັນຈາກທອງຄຳ. ໂລ້ແຕ່ລະອັນໃຊ້ທອງຄຳຫນັກເກືອບສອງກິໂລ;
ກະສັດໄດ້ເກັບໂລ້ໄວ້ໃນຫ້ອງໂຖງແຫ່ງດົງເລບານອນ.
[18]ແລ້ວກະສັດໄດ້ສ້າງບັນລັງທີ່ໃຫຍ່ໂຕດ້ວຍງາຊ້າງ ແລະ ໂອບດ້ວຍທອງຄຳຢ່າງດີທີ່ສຸດ.[19]ມີຄັນໄດຫົກຂັ້ນຂຶ້ນໄປເທິງບັນລັງ ແລະ
ຢູ່ທາງເບື້ອງຫລັງຂອງມັນກໍມີຮູບຫົວງົວ. ໄດ້ມີບ່ອນວາງແຂນ ແຕ່ລະຂ້າງຂອງບັນລັງ, ແລະ ມີສິງໂຕສອງໂຕທີ່ຢູ່ທາງຂ້າງບ່ອນວາງແຂນນັ້ນ.
[20]ມີຮູບສິງໂຕອີກສິບສອງໂຕຢືນຢູ່ເທິງຂັ້ນຄັນໄດ, ຫນຶ່ງໂຕຢູ່ເທິງແຕ່ລະຂ້າງຂອງຂັ້ນທັງຫົກຂັ້ນ.
ບໍ່ມີບັນລັງໃດຈະຄືບັນລັງນີ້ໃນອານາຈັກອື່ນໆເລີຍ.
[21]ຖ້ວຍເຄື່ອງດື່ມທັງຫມົດ ຂອງກະສັດໂຊໂລໂມນເຮັດດ້ວຍທອງຄຳ, ແລະ
ຖ້ວຍເຄື່ອງດື່ມທັງຫມົດທີ່ຢູ່ໃນຫ້ອງໂຖງຂອງເລບານອນນັ້ນເຮັດດ້ວຍທອງຄຳບໍຣິສຸດ. ບໍ່ມີທີ່ເຮັດດ້ວຍເງິນເລີຍ, ເພາະເ
ງິນນັ້ນຖືວ່າເປັນຂອງທີ່ບໍ່ມີຄ່າຫຍັງໃນສະໄຫມຂອງໂຊໂລໂມນ.[22]ກະສັດໄດ້ມີກອງທັບເຮືອເດີນທະເລພ້ອມທັງກອງທັບເຮືອຂອງຮີຣາມ.
ກອງທັບເຮືອໄດ້ນຳທອງຄຳ, ເງິນ, ງາຊ້າງ, ລິງໃຫຍ່ ແລະ ລິງນ້ອຍມາສາມປີຕໍ່ຄັ້ງ.
[23]ດັ່ງນັ້ນ ກະສັດໂຊໂລໂມນຈຶ່ງໄດ້ຍິ່ງໃຫຍ່ກວ່າກະສັດອື່ນໆໃນໂລກ ໃນເລື່ອງຄວາມຮັ່ງມີ ແລະ ສະຕິປັນຍາ.
[24]ທົ່ວທັງໂລກກໍສະແຫວງຫາການມາຟັງສະຕິປັນຍາຂອງເພິ່ນ, ທີ່ພຣະເຈົ້າໄດ້ປຣະທານໄວ້ໃຫ້ໃນໃຈຂອງເພິ່ນນັ້ນ.
[25]ທຸກຄົນທີ່ໄດ້ມາກໍໄດ້ນຳຂອງຂວັນມາມອບໃຫ້ເພິ່ນ ຄືສິ່ງທີ່ເຮັດດ້ວຍເງິນ ແລະ ຄຳ, ເສື້ອຜ້າ, ອາວຸດ, ເຄື່ອງເທດ, ມ້າ ແລະ ລໍໃນທຸກໆປີ.
[26]ໂຊໂລໂມນໄດ້ຮວບຮວມລົດມ້າ ແລະ ຄົນຂີ່ມ້າ. ເພິ່ນໄດ້ມີລົດມ້າ 1,400 ຄັນ ແລະ ມ້າ ສິບສອງພັນໂຕ ຊຶ່ງເພິ່ນໄດ້ໃຫ້ປະຈຳຢູ່ທີ່ເມືອງລົດມ້າ
ແລະ ໄດ້ປະຈຳການຢູ່ກັບເພິ່ນໃນນະຄອນເຢຣູຊາເລັມ.[27]ກະສັດໄດ້ເຮັດໃຫ້ເງິນໃນນະຄອນເຢຣູຊາເລັມ, ເປັນຄືກ້ອນຫີນເທິງພື້ນດິນ.
ເພິ່ນໄດ້ເຮັດໃຫ້ມີໄມ້ແປກຢ່າງຫລວງຫລາຍຄືຕົ້ນຫມາກເດື່ອເທດທີ່ເກີດຢູ່ຕາມຕີນພູ.
[28]ມ້າຂອງໂຊໂລໂມນໄດ້ຊື້ມາຈາກມຸດສະຣີ ແລະ ກິລິເກຍ. ບັນດາພໍ່ຄ້າຂອງກະສັດກໍໄດ້ຊື້ມ້າມາເປັນຝູງໆ, ແຕ່ລະຝູງຕາມລາຄາ.
[29]ສ່ວນລົດມ້າທີ່ໄດ້ຊື້ມາຈາກປະເທດເອຢິບນັ້ນ ຄັນຫນຶ່ງມີລາຄາເປັນເງິນຫົກຮ້ອຍຫລຽນເງິນ, ມ້າໂຕຫນຶ່ງມີລາຄາ ຫ້າຮ້ອຍສິບຫລຽນເງິນ.
ມ້າເຫລົ່ານີ້ກໍໄດ້ຂາຍໄປໃຫ້ກະສັດທັງປວງຂອງຄົນຮິດຕີ ແລະ ຄົນອາຣາມ.


generated on Tue Jun 17 19:01:42 2025

11 [1]ກະສັດໂຊໂລໂມນໄດ້ຮັກຍິງຕ່າງຊາດຫລາຍຄົນ: ນອກຈາກລູກສາວຂອງຟາໂຣແລ້ວ ຍັງມີຍິງຊາວໂມອາບ, ຍິງຊາວອຳໂມນ,
ຍິງຊາວເອໂດມ, ຍິງຊາວຊີໂດນ, ແລະ ຍິງຊາວຮິດຕີ -[2]ຊຶ່ງເປັນປະຊາຊາດທີ່ພຣະຢາເວໄດ້ກ່າວກັບຄົນອິດສະຣາເອນວ່າ,
"ພວກເຈົ້າຢ່າແຕ່ງງານກັບພວກເຂົາ ຫລື ຢ່າໃຫ້ພວກເຂົາມາແຕ່ງງານກັບພວກເຈົ້າ,
ເພາະພວກເຂົາຈະຫັນຈິດໃຈຂອງພວກເຈົ້າໄປຕາມພະຕ່າງໆຂອງພວກເຂົາຢ່າງແນ່ນອນ." ແຕ່ໂຊໂລໂມນໄດ້ຮັກຜູ້ຍິງເຫລົ່ານີ້.

[3]ໂຊໂລໂມນໄດ້ມີເມຍທີ່ເປັນເຈົ້າຍິງເຈັດຮ້ອຍຄົນ ແລະ ມີເມຍນ້ອຍສາມຮ້ອຍຄົນ. ບັນດາເມຍຂອງເພິ່ນກໍໄດ້ຫັນຈິດໃຈຂອງເພິ່ນໄປ.
[4]ເພາະເມື່ອໂຊໂລໂມນໄດ້ເຖົ້າແກ່ແລ້ວ, ບັນດາເມຍຂອງເພິ່ນກໍໄດ້ຫັນຈິດໃຈຂອງເພິ່ນໄປຕາມພະອື່ນໆ;
ຈິດໃຈຂອງເພິ່ນບໍ່ພັກດີຕໍ່ພຣະຢາເວພຣະເຈົ້າຂອງເພິ່ນ, ບໍ່ຄືກັບຈິດໃຈຂອງດາວິດພໍ່ຂອງເພິ່ນ.
[5]ເພາະໂຊໂລໂມນໄດ້ດຳເນີນຕາມເຈົ້າແມ່ອັດສະຕາກ, ພະຂອງຊາວຊີໂດນ, ແລະ ຕາມພະໂມເລກ, ພະທີ່ຫນ້າລັງກຽດຂອງຊາວອຳໂມນ.
[6]ໂຊໂລໂມນໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ; ເຂົາບໍ່ໄດ້ດຳເນີນຕາມພຣະຢາເວຢ່າງສຸດໃຈ, ບໍ່ຄືດາວິດພໍ່ຂອງເພິ່ນໄດ້ດຳເນີນ.
[7]ແລ້ວໂຊໂລໂມນໄດ້ສ້າງບ່ອນຂາບໄຫວ້ພະເຄໂມດ, ຊຶ່ງເປັນພະຂອງຊາວໂມອາບທີ່ຫນ້າລັງກຽດ,
ເທິງພູເຂົາທີ່ຢູ່ທາງທິດຕາເວັນອອກຂອງນະຄອນເຢຣູຊາເລັມ, ແລະ ສ້າງບ່ອນຂາບໄຫວ້ພະໂມເລກ,
ຊຶ່ງເປັນພະຂອງຊາວອຳໂມນທີ່ຫນ້າລັງກຽດດ້ວຍ.[8]ເພິ່ນໄດ້ສ້າງບ່ອນຂາບໄຫວ້ໃຫ້ບັນດາເມຍຕ່າງຊາດທັງຫມົດຂອງເພິ່ນ,
ຜູ້ທີ່ໄດ້ເຜົາເຄື່ອງຫອມ ແລະ ຖວາຍເຄື່ອງບູຊາແກ່ບັນດາພະຂອງພວກນາງ.
[9]ພຣະຢາເວໄດ້ໂກດຮ້າຍໂຊໂລໂມນ, ເພາະຈິດໃຈຂອງເພິ່ນໄດ້ຫັນໄປຈາກພຣະຢາເວ ພຣະເຈົ້າແຫ່ງອິດສະຣາເອນ,
ຜູ້ຊຶ່ງໄດ້ປາກົດຕໍ່ເພິ່ນສອງເທື່ອແລ້ວ[10]ແລະ ໄດ້ຊົງສັ່ງເພິ່ນກ່ຽວກັບເລື່ອງນີ້ວ່າ, ເພິ່ນບໍ່ຄວນໄປຕິດຕາມພະອື່ນໆ.
ແຕ່ໂຊໂລໂມນບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະຢາເວ.
[11]ເພາະສະນັ້ນ ພຣະຢາເວໄດ້ກ່າວກັບໂຊໂລໂມນວ່າ, "ເພາະເຈົ້າເຮັດແບບນີ້ ແລະ ເຈົ້າບໍ່ໄດ້ຮັກສາພັນທະສັນຍາ ແລະ ກົດເກນຂອງເຮົາ
ຊຶ່ງເຮົາໄດ້ສັ່ງເຈົ້າ, ເຮົາຈະເອົາອານາຈັກຂອງເຈົ້າໄປຈາກເຈົ້າແນ່ນອນ ແລະ ມອບໃຫ້ຄົນຫນຶ່ງໃນບັນດາຂ້າຣາຊະການຂອງເຈົ້າ.
[12]ຢ່າງໃດກໍຕາມ, ເພື່ອເຫັນແກ່ດາວິດພໍ່ຂອງເຈົ້າ, ເຮົາຈະບໍ່ເຮັດໃນສະໄຫມຂອງເຈົ້າ, ແຕ່ມັນຈະເກີດຂຶ້ນໃນຣາຊະການຂອງລູກຊາຍຂອງເຈົ້າ.
[13]ຢ່າງໃດກໍດີ ເຮົາຈະບໍ່ເອົາອານາຈັກທັງຫມົດໄປຈາກລາວ; ແຕ່ເຮົາຈະຈົ່ງເຜົ່າຫນຶ່ງໄວ້ໃຫ້ລາວ, ເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ, ແລະ
ເພື່ອເຫັນແກ່ເຢຣູຊາເລັມຊຶ່ງເຮົາໄດ້ເລືອກໄວ້."
[14]ແລ້ວພຣະຢາເວໄດ້ປະຕິບັດເກີດຂຶ້ນຕໍ່ສູ້ໂຊໂລໂມນ, ຄືຮາດາດຄົນເອໂດມ ເຂົາເປັນຄົນຫນຶ່ງໃນຄອບຄົວຂອງກະສັດແຫ່ງເອໂດມ.
[15]ເມື່ອດາວິດໄດ້ຢູ່ໃນເອໂດມນັ້ນ, ໂຢອາບຜູ້ບັນຊາການກອງທັບໄດ້ຂຶ້ນໄປຝັງຜູ້ທີ່ຖືກຂ້າຕາຍ, ແລະ ໄດ້ຂ້າຜູ້ຊາຍທຸກຄົນໃນເອໂດມ.[16]ໂຢອາບ
ແລະ ຄົນອິດສະຣາເອນທັງຫມົດຍັງຢູ່ທີ່ນັ້ນຫົກເດືອນ ຈົນກວ່າເຂົາຈະໄດ້ຂ້າຊີວິດຜູ້ຊາຍທຸກຄົນໃນເອໂດມທັງຫມົດ.
[17]ແຕ່ຮາດາດໄດ້ຫນີໄປເອຢິບ, ພ້ອມກັບຄົນເອໂດມບາງຄົນຜູ້ທີ່ເປັນຄົນຮັບໃຊ້ຂອງພໍ່ຂອງເຂົາ ເວລານັ້ນຮາດາດຍັງເປັນເດັກນ້ອຍຢູ່.
[18]ພວກເຂົາໄດ້ອອກຈາກເມືອງມີດີອານ ແລະ ໄປທີ່ເມືອງປາຣານ, ຈາກທີ່ຊຶ່ງມາກັບເຂົາທັງຫລາຍເຂົ້າໄປປະເທດເອຢິບ,
ເພື່ອໄປເຝົ້າຟາໂຣກະສັດແຫ່ງເອຢິບ, ຜູ້ໄດ້ປະທານບ້ານ ແລະທີ່ດິນແລະອາຫານໃຫ້ເຂົາດ້ວຍ.[19]ຮາດາດເປັນທີ່ພໍໃຈໃນສາຍຕາຂອງຟາໂຣ,
ຟາໂຣຈຶ່ງໄດ້ປະທານນ້ອງສາວຂອງເມຍຕົນເອງ, ຄືນ້ອງສາວຂອງຣາຊີນີຕາເປເນັດໃຫ້ເປັນເມຍຂອງເຂົາ.
[20]ນ້ອງສາວຂອງຕາເປເນັດກໍເກີດລູກຊາຍແກ່ຮາດາດ. ພວກເຂົາໄດ້ຕັ້ງຊື່ວ່າ ເກນູບັດ. ຕາເປເນັດໄດ້ລ້ຽງເຂົາໃນຣາຊວັງຂອງຟາໂຣ.
ດັ່ງນັ້ນເກນູບັດໄດ້ອາໄສຢູ່ໃນຣາຊວັງຂອງຟາໂຣທ່າມກາງບັນດາລູກຂອງຟາໂຣ.[21]ຂະນະທີ່ເຂົາໄດ້ຢູ່ໃນເອຢິບ,
ຮາດາດໄດ້ຍິນວ່າດາວິດໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງເພິ່ນແລ້ວ ແລະໂຢອາບຜູ້ບັນຊາການກອງທັບກໍໄດ້ເສຍຊີວິດແລ້ວ,
ຮາດາດຈຶ່ງໄດ້ບອກຟາໂຣວ່າ, "ຂໍໃຫ້ຂ້ານ້ອຍໄປ, ແລະ ຂ້ານ້ອຍຈະກັບໄປປະເທດຂອງຂ້ານ້ອຍ."[22]ແລ້ວຟາໂຣໄດ້ກ່າວກັບເຂົາວ່າ,
"ເຈົ້າຢູ່ກັບເຮົາ, ເຈົ້າຂາດເຫລືອຫຍັງບໍ? ເຈົ້າຈຶ່ງຫາທາງທີ່ຈະກັບໄປປະເທດຂອງເຈົ້າ" ຮາດາດໄດ້ຕອບວ່າ "ບໍ່ໄດ້ຂາດຫຍັງ
ແຕ່ຂໍໃຫ້ຂ້ານ້ອຍໄດ້ກັບໄປບ້ານຂອງຕົນເທີ້ນ."
[23]ພຣະເຈົ້າໄດ້ຊົງໃຫ້ອີກຄົນຫນຶ່ງເກີດຂຶ້ນຕໍ່ສູ້ໂຊໂລໂມນ, ຄືເຣຊົນລູກຊາຍຂອງເອລີອາດາ
ຜູ້ທີ່ໄດ້ຫນີໄປຈາກຮາດາເດເຊກະສັດແຫ່ງໂຊບາເຈົ້ານາຍຂອງເຂົາ.[24]ເຣຊົນໄດ້ລວບລວມຜູ້ຄົນໃຫ້ຢູ່ກັບເຂົາ ແລະ
ໄດ້ກາຍເປັນກອງກຳລັງນ້ອຍໆ, ເມື່ອດາວິດໄດ້ເອົາຊະນະຊາວໂຊບານັ້ນ. ຜູ້ຄົນຂອງເຣຊົນໄດ້ໄປໃນເມືອງດາມັສກັດ ແລະໄດ້ອາໄສຢູ່ທີ່ນັ້ນ,
ແລະ ເຣຊົນໄດ້ຄອບຄອງເມືອງດາມັສກັດ.[25]ເຂົາໄດ້ເປັນສັດຕູຂອງອິດສະຣາເອນຕະຫລອດສະໄຫມຂອງໂຊໂລໂມນ,
ຮາດາດກໍໄດ້ກໍໃຫ້ເກີດຄວາມຍາກລຳບາກໄປພ້ອມໆກັນ. ເຣຊົນໄດ້ກຽດຊັງອິດສະຣາເອນ ແລະ ໄດ້ປົກຄອງອາຣາມ.
[26]ແລ້ວເຢໂຣໂບອາມລູກຊາຍຂອງເນບັດ, ຄົນເອຟຣາອິມ, ຈາກເມືອງເຊເຣດາ. ຂ້າຣາຊະການຄົນຫນຶ່ງຂອງໂຊໂລໂມນ,
ຜູ້ທີ່ແມ່ຂອງເຂົາເປັນຍິງຫມ້າຍ, ຊື່ເຊຣູຢາ, ໄດ້ກະບົດຕໍ່ກະສັດດ້ວຍ.[27]ເຫດຜົນທີ່ເຂົາກະບົດຕໍ່ກະສັດ
ເພາະໂຊໂລໂມນໄດ້ຖົມດິນແດນທາງທິດຕາເວັນອອກຂອງນະຄອນເຢຣູຊາເລັມ ແລະ ໄດ້ສ້ອມແປງກຳແພງເມືອງຂອງດາວິດພໍ່ຂອງຕົນ.
[28]ເຢໂຣໂບອາມເປັນນັກຮົບກ້າຫານ. ໂຊໂລໂມນໄດ້ເຫັນວ່າລາວເປັນຊາຍຫນຸ່ມທີ່ເອົາໃຈໃສ່ຕໍ່ວຽກງານ,
ດັ່ງນັ້ນຈຶ່ງໄດ້ຕັ້ງໃຫ້ດູແລແຮງງານທັງຫມົດໃນເຮືອນຂອງໂຢເຊັບ.[29]ໃນເວລານັ້ນ, ເມື່ອເຢໂຣໂບອາມໄດ້ອອກຈາກນະຄອນເຢຣູຊາເລັມ,
ອາຮີຢາຜູ້ເຜີຍພຣະວັດຈະນະຊາວຊີໂລໄດ້ພົບເຂົາກາງທາງ. ບັດນີ້ ອາຮີຢາໄດ້ໃສ່ເສື້ອຄຸມໃຫມ່ ແລະ ທັງສອງຄົນກໍໄດ້ຢູ່ລຳພັງໃນທົ່ງນາ.
[30]ແລ້ວອາຮີຢາກໍໄດ້ຈັບເສື້ອຄຸມໃຫມ່ທີ່ເຂົາສວມໃສ່ຢູ່ ແລະ ຈີກອອກເປັນສິບສອງຕ່ອນ.
[31]ເຂົາໄດ້ເວົ້າກັບເຢໂຣໂບອາມວ່າ, "ຈົ່ງເອົາໄປສິບຕ່ອນ, ເພາະພຣະຢາເວພຣະເຈົ້າແຫ່ງອິດສະຣາເອນກ່າວດັ່ງນີ້ວ່າ, "ເບິ່ງແມ້,
ເຮົາກຳລັງຈະຈີກອານາຈັກຈາກມືຂອງໂຊໂລໂມນ ແລະ ຈະໃຫ້ເຈົ້າສິບເຜົ່າ.[32](ແຕ່ເຂົາຈະມີເຜົ່າຫນຶ່ງເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາແລະ
ເພື່ອເຫັນແກ່ເຢຣູຊາເລັມເມືອງຊຶ່ງເຮົາໄດ້ເລືອກຈາກເຜົ່າທັງຫມົດຂອງອິດສະຣາເອນ)[33]ເພາະພວກເຂົາໄດ້ປະຖິ້ມເຮົາ ແລະ
ໄປນະມັດສະການເຈົ້າແມ່ອັດສະຕາກພະຂອງຊາວຊີໂດນ, ເຄໂມດພະຂອງຊາວໂມອາບ, ແລະ ໂມເລກ ພະຂອງຊາວອຳໂມນ.
ພວກເຂົາບໍ່ໄດ້ດຳເນີນໃນທາງຂອງເຮົາ, ຄືເຮັດໃນສິ່ງທີ່ຊອບທຳໃນສາຍຕາຂອງເຮົາ, ທັງບໍ່ໄດ້ຮັກສາກົດເກນ ແລະ ກົດຫມາຍຂອງເຮົາ,
ບໍ່ຄືກັບດາວິດພໍ່ຂອງເຂົາໄດ້ເຮັດ.


generated on Tue Jun 17 19:01:42 2025

[34]ຢ່າງໃດກໍຕາມ, ເຮົາຈະບໍ່ເອົາອານາຈັກທັງຫມົດໄປຈາກມືຂອງເຂົາ. ແຕ່ເຮົາຈະໃຫ້ເຂົາເປັນຜູ້ຄອບຄອງຕະຫລອດຊີວິດຂອງເຂົາ,
ເພາະເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາຜູ້ທີ່ເຮົາເລືອກໄວ້, ຜູ້ໄດ້ຮັກສາບັນຍັດ ແລະ ກົດເກນຂອງເຮົາ.
[35]ແຕ່ເຮົາຈະເອົາອານາຈັກໄປຈາກມືລູກຊາຍຂອງເຂົາ ແລະ ຈະມອບໃຫ້ເຈົ້າສິບເຜົ່າ.
[36]ເຮົາຈະໃຫ້ເຜົ່າຫນຶ່ງແກ່ລູກຊາຍຂອງເຂົາເພື່ອວ່າດາວິດຜູ້ຮັບໃຊ້ຂອງເຮົາຈະມີໂຄມໄຟດວງຫນຶ່ງຕໍ່ຫນ້າເຮົາຕະຫລອດເວລາໃນເຢຣູຊາເລັມ,
ເມືອງຊຶ່ງເຮົາເລືອກໃຫ້ນາມຊື່ຂອງເຮົາຕັ້ງຢູ່ທີ່ນັ້ນ.
[37]ເຮົາຈະເອົາໂຕເຈົ້າ, ແລະ ເຈົ້າຈະປົກຄອງທຸກຢ່າງທີ່ໃຈຂອງເຈົ້າຕ້ອງການ, ແລະ ເຈົ້າຈະເປັນກະສັດຂອງອິດສະຣາເອນ.
[38]ຖ້າເຈົ້າເຊື່ອຟັງທຸກສິ່ງທີ່ເຮົາສັ່ງເຈົ້າ, ແລະ ດຳເນີນໃນທາງທັງຫລາຍຂອງເຮົາ ແລະ ເຮັດສິ່ງທີ່ຊອບທຳໃນສາຍຕາຂອງເຮົາ,
ໂດຍຮັກສາກົດເກນ ແລະບັນຍັດຂອງເຮົາ, ຄືຢ່າງທີ່ດາວິດຜູ້ຮັບໃຊ້ຂອງເຮົາໄດ້ເຮັດ, ແລ້ວເຮົາຈະຢູ່ກັບເຈົ້າ ແລະ
ຈະສ້າງເຊື້ອສາຍທີ່ຫມັ້ນຄົງໃຫ້ເຈົ້າ ຄືທີ່ເຮົາໄດ້ສ້າງໃຫ້ດາວິດ, ແລະ ເຮົາຈະໃຫ້ອິດສະຣາເອນແກ່ເຈົ້າ.[39]ເຮົາຈະລົງໂທດເຊື້ອສາຍຂອງດາວິດ,
ແຕ່ບໍ່ແມ່ນຕະຫລອດໄປ.""
[40]ດັ່ງນັ້ນໂຊໂລໂມນຈຶ່ງໄດ້ພະຍາຍາມທີ່ຈະຂ້າເຢໂຣໂບອາມ. ແຕ່ເຢໂຣໂບອາມໄດ້ລຸກຂຶ້ນຫນີໄປປະເທດເອຢິບ, ໄປຫາຊີຊາກກະສັດແຫ່ງເອຢິບ,
ແລະ ເຂົາໄດ້ຢູ່ໃນເອຢິບຈົນກະສັດໂຊໂລໂມນຕາຍ.
[41]ສ່ວນເລື່ອງອື່ນໆນອກນັ້ນຂອງໂຊໂລໂມນ, ແລະ ທຸກສິ່ງທີ່ເພິ່ນໄດ້ເຮັດ ແລະສະຕິປັນຍາຂອງເພິ່ນ,
ເລື່ອງເຫລົ່ານັ້ນໄດ້ບັນທຶກໄວ້ໃນຫນັງສືຣາຊກິດຂອງໂຊໂລໂມນບໍ່ແມ່ນບໍ?[42]ໂຊໂລໂມນໄດ້ປົກຄອງໃນເຢຣູຊາເລັມ
ເຫນືອປະເທດອິດສະຣາເອນທັງຫມົດເປັນເວລາສີ່ສິບປີ.[43]ເພິ່ນໄດ້ຕາຍໄປ ແລະ ຢູ່ກັບບັນພະບູລຸດຂອງເພິ່ນ ແລະ
ຝັງເພິ່ນໄວ້ໃນນະຄອນດາວິດພໍ່ຂອງເພິ່ນ. ເຣໂຫໂບອາມລູກຊາຍຂອງເພິ່ນກໍໄດ້ຂຶ້ນເປັນກະສັດແທນ.

 generated on Tue Jun 17 19:01:42 2025

12 1 ເຣໂຫໂບອາມໄດ້ໄປທີ່ເມືອງຊີເຄມ, ເພາະອິດສະຣາເອນທັງຫມົດໄດ້ມາຊີເຄມ ເພື່ອຈະຕັ້ງເພິ່ນໃຫ້ເປັນກະສັດ.
2 ເມື່ອເຢໂຣໂບອາມລູກຊາຍຂອງເນບັດຮູ້ເລື່ອງນີ້ແລ້ວ (ເພິ່ນຍັງຄົງຢູ່ໃນເອຢິບ, ເພາະເພິ່ນຫນີຈາກກະສັດໂຊໂລໂມນ), ສໍາ
ຫລັບເຢໂຣໂບອາມໄດ້ອາໄສຢູ່ໃນເອຢິບ.

3 ດັ່ງນັ້ນ ເຂົາທັງຫລາຍກໍໄດ້ໃຊ້ຄົນໄປເຊີນເພິ່ນ, ແລະເຣໂຫໂບອາມ ແລະຊຸມນຸມຊົນອິດສະຣາເອນທັງຫມົດໄດ້ເວົ້າບອກຕໍ່ເຣໂຫໂບອາມວ່າ,
4 ພໍ່ຂອງເພິ່ນໄດ້ຊົງປະພຶດຕໍ່ພວກເຮົາຮຸນແຮງໂພດ. ທີ່ເຮັດໃຫ້ເຮົາແບກຫນັກຫລາຍ ບັດນີ້ຂໍຊົງລົດງານຫນັກຂອງພໍ່ຂອງເພິ່ນ,
ແລະຊ່ວຍບັນເທົາພາລະນີ້ໃຫ້ເບົາບາງລົງແລ້ວພວກຂ້ານ້ອຍຈະຮັບໃຊ້ທ່ານ." 5 ເຣໂຫໂບອາມໄດ້ກ່າວກັບພວກເຂົາວ່າ, "ຈົ່ງກັບໄປກ່ອນ
ແລ້ວສາມວັນ, ຈຶ່ງມາຫາເຮົາອີກ" ດັ່ງນັ້ນປະຊາຊົນຈຶ່ງໄດ້ກັບໄປ.
6 ກະສັດເຣໂຫໂບອາມໄດ້ຊົງປຶກສາຜູ້ອາວຸໂສ ຜູ້ຊົງປະຕິບັດໂຊໂຣໂມນ ພໍ່ຂອງລາວ ຂະນະທີ່ລາວກໍາລັງນອນຢູ່, ລາວໄດ້ກ່າວວ່າ,"
ທ່ານຈະແນະນໍາເຮົາທັງຫລາຍໃຫ້ຕອບກັບປະຊາຊົນນີ້ຢ່າງໃດດີ?" 7 ເຂົາທັງຫລາຍຈະກ່າວກັບເພິ່ນວ່າ," ຖ້າເພິ່ນຊົງເປັນຜູ້ຮັບໃຊ້ປະຊາຊົນນີ້
ແລະປະຕິບັດພວກເຂົາ, ແລະກ່າວຄໍາດີໆແກ່ເຂົາ, ເຂົາທັງຫລາຍຈະເປັນຜູ້ຮັບໃຊ້ຂອງລາວຕະຫລອດໄປ."
8 ແຕ່ເຣໂຫໂບອາມໄດ້ເສີຍຊາຕໍ່ຄໍາປຶກສາທີ່ບັນດາຜູ້ອາວຸໂສຖວາຍນັ້ນ ແລະໄດ້ປຶກສາກັບພວກຄົນຫນຸ່ມທີ່ເຕີບໂຕຂຶ້ນມາພ້ອມກັບລາວ
ແລະຢືນຢູ່ຝ່າຍລາວ. 9 ທ່ານຈຶ່ງກ່າວກັບເຂົາທັງຫລາຍວ່າ, "ທ່ານຈະແນະນໍາເຮົາເພື່ອພວກເຮົາຈະຕອບປະຊາຊົນນີ້ຜູ້ໄດ້ຊົງລາຍງານວ່າ,"
ຂໍຊົງເຮັດໃຫ້ວຽກງານຂອງເຮົາເບົາລົງ?"
10 ຄົນຫນຸ່ມເຫລົ່ານັ້ນຜູ້ທີ່ໄດ້ເຕີບໃຫຍ່ມາພ້ອມກັບເຣໂຫໂບອາມ, ໄດ້ເວົ້າຕໍ່ເພິ່ນວ່າ, "ຂໍທ່ານກ່າວດັ່ງນີ້ແກ່ປະຊາຊົນນີ້ ຜູ້ທີ່ໄດ້ກ່າວກັບທ່ານວ່າ
ພໍ່ຂອງທ່ານ ໂຊໂຣໂມນໄດ້ເຮັດໃຫ້ວຽກຂອງພວກຂ້ານ້ອຍຫນັກ ແຕ່ຂໍທ່ານຊົງເຮັດໃຫ້ເບົາລົງ. ຂໍທ່ານກ່າວກັບເຂົາທັງຫລາຍວ່າ,
'ນິ້ວກ້ອຍຂອງເຮົາກໍຫນາກ່ອນແອວພໍ່ເຮົາ. 11 ດັ່ງນັ້ນດຽວນີ້, ເຖິງວ່າພໍ່ເຮົາໄດ້ວາງພາລະຫນັກກັບທ່ານທັງຫລາຍ,
ສ່ວນເຮົາຈະເພີ່ມວຽກຂອງທ່ານອີກ. ພໍ່ຂອງເຮົາຈະລົງໂທດທ່ານດ້ວຍແສ້, ແຕ່ເຮົາຈະລົງໂທດທ່ານດ້ວຍແມງປ່ອງ.'"
12 ດັ່ງນັ້ນເຢໂຣໂບອາມກັບປະຊາຊົນທັງຫມົດ ຈຶ່ງໄດ້ມາເຝົ້າເຣໂຫໂບອາມວັນທີສາມ, ດັ່ງທີ່ກະສັດສັ່ງວ່າ,
"ຈົ່ງກັບມາຫາເຮົາໃນວັນທີສາມ." 13 ກະສັດໄດ້ຕອບປະຊາຊົນຢ່າງດຸດັນ ແລະເສີຍຊາຕໍ່ຄໍາປຶກສາທີ່ບັນດາຜູ້ອາວຸໂສໄດ້ກ່າວ ກັບທ່ານ.
14 ທ່ານໄດ້ກ່າວກັບຄົນຫນຸ່ມທັງຫລາຍວ່າ ພໍ່ຂອງຂອງເຮົາໄດ້ວາງພາລະຫນັກໃຫ້ເຮົາ; ສ່ວນທ່ານກໍຈະເພີ່ມວຽກຂອງທ່ານຫລາຍຕື່ມອີກ.
ພໍ່ຂອງເຮົາໄດ້ລົງໂທດດ້ວຍແສ້ ແຕ່ເຮົາຈະລົງໂທດດ້ວຍແມງປ່ອງ."
15 ດັ່ງນັ້ນກະສັດບໍ່ຟັງປະຊາຊົນ, ເພາະການປ່ຽນວຽກນີ້ມາຈາກພຣະຢາເວພຣະເຈົ້າຂອງພວກທ່ານ,
ເພື່ອທ່ານຈະໄດ້ເຮັດໃຫ້ພຣະວັດຈະນະຂອງພຣະອົງສໍາເລັດ ຊຶ່ງພຣະຢາເວໄດ້ກ່າວກັບເຢໂຣໂບອາມລູກຊາຍຂອງເນບັດ.
16 ເມື່ອອິດສະຣາເອນທັງຫມົດໄດ້ເຫັນວ່າກະສັດບໍ່ຟັງເຂົາທັງຫລາຍ, ປະຊາຊົນກໍຕອບກະສັດວ່າ," ພວກທ່ານມີສ່ວນແບ່ງຫຍັງຈາກດາວິດ?
ຂ້ານ້ອຍບໍ່ມີສ່ວນໃນມໍລະດົກຈາກລູກຊາຍຂອງເຢຊີ! ອິດສະຣາເອນເອີຍ ກັບໄປເຕັນຂອງທ່ານເຖີດ, ອິດສະຣາເອນ.
ຈົ່ງເບິ່ງຣາຊວົງຂອງທ່ານເອງເຖີດ, ດາວິດ. "ດັ່ງນັ້ນຄົນອິດສະຣາເອນຈຶ່ງໄດ້ກັບໄປຍັງເຕັນຂອງພວກເຂົາ.
17 ແຕ່ເຣໂຫໂບອາມປົກຄອງປະຊາຊົນອິດສະຣາເອນ ຜູ້ອາໄສຢູ່ເມືອງຕ່າງໆຂອງຢູດາ, ເຣໂຫໂບອາມໄດ້ເປັນກະສັດຄອງເຫນືອພວກເຂົາ.
18 ແຕ່ກະສັດເຣໂຫໂບອາມໄດ້ໃຊ້ອາໂດມຜູດູແລໂຍທາໄປ
ແຕ່ອິດສະຣາເອນທັງຫມົດຂອງເອົາຫີນດຶກໃສ່ເຂົາຕາຍກະສັດເຣໂຫໂບອາມກໍຮີບຂຶ້ນລົດມ້າເສິກຫນີໄປກຸງເຢຣູຊາເລັມ 19 ດັ່ງນັ້ນອິດສະຣາເອນຈຶ່ງກະບົດຕໍ່ຣາຊວົງ
20 ຕໍ່ມາເມື່ອອິດສະຣາເອນທັງຫລາຍໄດ້ຍິນວ່າເຣໂຫໂບອາມໄດ້ກັບມາແລ້ວ ພວກເຂົາກໍໄດໃຫ້ໄປເຊີນທ່ານມາທີ່ປະຊຸມ
ແລ້ວກໍຕັ້ງທ່ານໃຫ້ເປັນກະສັດເຫນືອອິດສະຣາເອນທັງຫມົດ ບໍ່ມີໃຜຕິດຕາມເຊື້ອຣາຊວົງຂອງດາວິດ ນອກຈາກເຜົ່າຢູດາເທົ່ານັ້ນ
21 ເມື່ອເຣໂຫໂບອາມໄດ້ມາຮອດນະຄອນເຢຣູຊາເລັມແລ້ວ ພຣະອົງໄດ້ຊົງລະດົມພົນຈາກຈາກພົງພັນຢູດາທັງຫມົດແລະເຜົ່າເບນຢາມິນ
ເປັນຜູ້ຊາຍທີ່ຄັດເລືອກມາເປັນທະຫານ 180,000ຄົນ ເພື່ອສູ້ຮົບກັບພົງພັນອິດສະຣາເອນ
ເພື່ອຈະກອບກູ້ຣາຊອານາຈັກຄືນມາໃຫ້ແກ່ເຣໂຫໂບອາມ ລູກຂອງໂຊໂລໂມນ
22 ແຕ່ພຣະວັດຈະນະຂອງພຣະເຈົ້າໄດ້ມາຍັງເຊໄມຢາ ຄົນຂອງພຣະເຈົ້າວ່າ 23 ຈົ່ງໄປທູນເຣໂຫໂບອາມລູກຂອງໂຊໂຣໂມນ ກະສັດແຫ່ງຢູດາ
ແລະບອກກັບພົງພັນທັງຫມົດຂອງຢູດາແລະເບັນຢາມິນ ແລະກັບປະຊາຊົນທີ່ເຫລືອຢູ່ວ່າ 24 ພຣະຢາເວໄດ້ກ່າວດັ່ງນີ້ວ່າ
ພວກເຈົ້າຢ່າຂຶ້ນໄປໂຈມຕີຫລືຕໍ່ສູ້ກັບປະຊາຊົນອິດສະຣາເອນພີ່ນ້ອງຂອງເຈົ້າເລີຍ ແຕ່ລະຄົນຈົ່ງກັບບ້ານຕົນເອງເຖີດ
ເພາະສິ່ງນີ້ເປັນມາຈາກເຮົາ" ດັ່ງນັ້ນພວກເຂົາຈຶ່ງໄດ້ເຊື່ອຟັງພຣະວັດຈະນະຂອງພຣະຢາເວ ແລະກັບໄປຕາມທາງຂອງຕົນ
ແລະພວກເຂົາໄດ້ເຊື່ອຟັງພຣະວັດຈະນະພຣະຢາເວ
25 ແລ້ວເຢໂຣໂບອາມໄດ້ຊົງສ້າງເມືອງເຊເຄມໃນຖິ່ນເອຟຣາຢິມ ແລະພັກຢູ່ເມືອງນັ້ນ ແລະອອກມາທີ່ນັ້ນ
ທ່ານໄດໄປສ້າງເມືອງເປນູເອນ 26 ເຢໂຣໂບອາມໄດ້ຄິດທບໃຈວ່າ" ເທື່ອນີ້ຈະກັບໄປເມືອງຂອງດາວິດ 27 ຖ້າປະຊາຊົນນີ້ຂຶ້ນໄປຖວາຍເຄື່ອງສັດບູຊາ
ໃນພຣະວິຫານຂອງພຣະຢາເວທີ່ເມືອງເຢຣູຊາເລັມ
ແລ້ວຈິດໃຈຂອງປະຊາຊົນນີ້ຈະຫັນກັບໄປຫາເຈົ້ານາຍຂອງເຂົາຄືກັບໄປເຣໂຫໂບອາມກະສັດແຫ່ງຢູດາ
28 ດັ່ງນັ້ນກະສັດເຢໂຫໂບອາມ ຈຶ່ງໄດ້ຊົງປຶກສາ ແລະໄດ້ຊົງສ້າງລູກງົວທອງຄໍາ ຂຶ້ນສອງຫົວ ແລະທ່ານໄດ້ກ່າວກັບປະຊາຊົນວ່າ"
ທ່ານທັງຫລາຍຂຶ້ນໄປຍັງກຸງເຢຣູຊາເລັມດົນແລ້ວ ໂອ້ ອິດສະຣາເອນເອີຍ ຈົ່ງເບິ່ງພຣະເຈົ້າຂອງທ່ານ
ຜູ້ຊົງໄດ້ນໍາທ່ານຂຶ້ນມາຈາກເອຢິບ" 29 ທ່ານໄດ້ເຮັດງົວໂຕຫນຶ່ງ ໄວ້ທີ່ເບເອນ ແລະອີກໂຕຫນຶ່ງຕັ້ງໄວ້ທີ່ເມືອງດານ 30 ດັ່ງນັ້ນ ການກະທໍານີ້ເປັນບາບ
ເພາະປະຊາຊົນໄດ້ກາບໄຫວ້ຕົວໃດຕົວຫນຶ່ງ ຕະຫລອດທາງໄປທີ່ເມືອງດານ
31 ເຢໂຣໂບອາມໄດ້ສ້າງວິຫານເຖິງສະຖານສູງ
ແລະທ່ານໄດ້ຕັ້ງປະຊາຊົນຈາກປະໂຣຫິດທໍາມະດາຜູ້ບໍ່ແມ່ນບັນດາລູກຊາຍຂອງຄົນເລວີ 32 ເຢໂຣໂບອາມໄດ້ກໍານົດເທດສະການລ້ຽງ
ໃນວັນທີສິບ ຫ້າເດືອນແປດຄືກັບການລ້ຽງໃນຢູດາ ແລະທ່ານໄດ້ໄປທີ່ແທ່ນບູຊາ
ທ່ານໄດ້ເຮັດແນວນີ້ໃນເບເອນຄືຖວາຍເຄື່ອງສັດບູຊາແກ່ຮູບງົວທີ່ທ່ານໄດ້ສ້າງໃນວັນນັ້ນ
ແລະທ່ານໄດ້ສະຖາປະນາປະໂຣຫິດປະຈໍາສະຖານສູງທີ່ເບັດເອນ ຊຶ່ງພຣະອົງຊົງສ້າງໄວ້ນັ້ນ

33ເຢໂຣໂບອາມໄດ້ຂຶ້ນໄປຍັງແທນບູຊາຊຶ່ງທ່ານໄດ້ຊົງສ້າງໄວ້ທີ່ເບເອນ ໃນວັນທີສິບຫ້າເດືອນແປດ ໃນເດືອນຊຶ່ງທ່ານໄດ້ຕັ້ງຂຶ້ນເອງ
ແລະໄດ້ກຳນົດເທດສະການກິນລ້ຽງສຳຫລັບຄົນອິດສະຣາເອນ ແລະໄດ້ສ້າງຂຶ້ນໄປຍັງແທ່ນບູຊາເພື່ອເຜົາເຄື່ອງຫອມ

# 13

[1]ຄົນຂອງພຣະເຈົ້າຄົນຫນຶ່ງໄດ້ອອກຈາກຢູດາໄປຍັງເບັດເອນ ໂດຍວັດຈະນະຂອງພຣະຢາເວ
ເຢໂຣໂບອາມໄດ້ຢືນຢູ່ແທ່ນບູຊາເພື່ອເຜົາເຄື່ອງຫອມ[2]ທ່ານໄດ້ກ່າວໂທດແທ່ນບູຊານັ້ນ ໂດຍວັດຈະນະຂອງພຣະຢາເວ ວ່າ" ໂອ ແທ່ນບູຊາ
ແທ່ນບູຊາ ພຣະຢາເວກ່າວດັ່ງນີ້ວ່າ ນີ້ເດ ລູກຊາຍຄົນຫນຶ່ງໄດ້ກ່າວວ່າໂຢສີຢາຈະເກີດມາໃນຣາຊວົງຂອງດາວິດ ແລະເທິງເຈົ້າຄືເທິງແທນນີ້
ເຂົາຈະບູຊາຍັນປະໂຣຫິດແຫ່ງສະຖານສູງເຜົາເຄື່ອງຫອມເທິງເຈົ້າແລະເຂົາຈະເຜົາກະດູກຄົນເທິງເຈົ້າ[3]ແລ້ວຄົນຂອງພຣະເຈົ້າກໍໄດ້ໃຫ້ຫມາຍສຳຄັນໃນວັນດຽວ
ກ່າວວ່າ "ນີ້ເປັນຫມາຍສຳຄັນທີ່ພຣະຢາເວໄດ້ກ່າວວ່າ" ເບິ່ງສາແທ່ນບູຊານັ້ນຈະຖືກແຍກອອກ ຈາກກັນແລະຂີ້ເທົ່າທີ່ຢູ່ເທິງນັ້ນຈະຖືກເທອອກ

[4]ເມື່ອກະສັດເຢໂຣໂບອາມໄດ້ຍິນຖ້ອຍຄຳທີ່ຄົນຂອງພຣະເຈົ້າໄດ້ຮ້ອງທູນຕໍ່ແທ່ນບູຊາທີ່ເບັດເອນນັ້ນ ເພິ່ນກໍຊີ້ຫນ້າຊາຍຜູ້ນັ້ນແລະສັ່ງວ່າ
ຈັບຊາຍຄົນນີ້ໄວ້ "ໃນທັນໃດນັ້ນແຂນຂອງກະສັດກໍລ່ອຍຈົນພັບຄືນບໍ່ໄດ້[5](ແທ່ນບູຊາກໍແຕກພັງທະລາຍລົງຢ່າງກະທັນຫັນ
ແລະຂີ້ເທົ່າກໍໄດ້ຖືກເທຈາກແທ່ນ ດັ່ງທີ່ອະທິບາຍຕາມຫມາຍສຳຄັນທີ່ຄົນຂອງພຣະເຈົ້າໄດ້ໃຫ້ໄວ້ໂດຍວັດຈະນະຂອງພຣະຢາເວ)
[6]ກະສັດເຢໂຣໂບອາມໄດ້ເວົ້າຕໍ່ຄົນຂອງພຣະເຈົ້າວ່າ“ກະລຸນາພາວັນນາອະທິຖານຂໍພຣະເຈົ້າຢາເວພຣະເຈົ້າຂອງທ່ານ
ແລະຈົ່ງອະທິຖານເພື່ອເຮົາ ເພື່ອວ່າເຮົາຈະພັບມືເຂົ້າຫາໂຕເອງໄດ້ອີກ“
ດັ່ງນັ້ນຄົນຂອງພຣະເຈົ້າກໍໄດ້ອະທິຖານຫາພຣະຢາເວແລະແຂນຂອງກະສັດກໍພັບເຂົ້າຫາກັນອີກ
ແລະໄດ້ກັບມາເປັນປົກກະຕິຢ່າງທີ່ໄດ້ເປັນມາກ່ອນຫນ້ານີ້[7]ກະສັດໄດ້ກ່າວກັບຄົນຂອງພຣະເຈົ້າວ່າ ເຊີນມາວັງກັບເຮົາເຖີດ
ແລະເຕີມພະລັງຂອງທ່ານ ແລະເຮົາຈະໃຫ້ລາງວັນທ່ານ“
[8]ຄົນຂອງພຣະເຈົ້າໄດ້ເວົ້າກັບກະສັດວ່າ ເຖິງແມ່ນວ່າທ່ານຈະປະທານສົມບັດເຄິ່ງຫນຶ່ງ ຂ້ານ້ອຍກໍຈະບໍ່ໄປກັບທ່ານ
ແລະຈະບໍ່ກິນອາຫານຫລືດື່ມນ້ຳໃນສະຖານທີ່ນີ້[9]ພຣະຢາເວໄດ້ຊົງບັນຊາຂ້ານ້ອຍ ໂດຍວັດຈະນະຂອງພຣະອົງວ່າ ຢ່າກິນອາຫານຫລືດື່ມນ້ຳ
ຫລືກັບໄປຕາມທາງທີ່ເຈົ້າມາ““[10]ດັ່ງນັ້ນຄົນຂອງພຣະເຈົ້າໄດ້ໄປອີກທາງຫນຶ່ງ ແລະບໍ່ໄດ້ກັບໄປທາງທີ່ເຂົ້າມາຍັງເບັດເອນ
[11]ບັດນີ້ມີຜູ້ເຜີຍວັດຈະນະຊາດົກຄົນຫນຶ່ງອາໄສຢູ່ໃນເບັດເອນ ຫນຶ່ງໃນລູກຊາຍຂອງເຂົາໄດ້ມາ
ແລະເລົ່າໃຫ້ຟັງເຖິງທຸກຢ່າງທີ່ຄົນຂອງພຣະເຈົ້າໄດ້ເຮັດໃນວັນນັ້ນໃນເບັດເອນ ລູກຊາຍຂອງເຂົາຍັງໄດ້ບອກເຂົາ
ເຖິງຄຳທີ່ພຣະເຈົ້າໄດ້ກ່າວກັບກະສັດດ້ວຍ[12]ພໍ່ຂອງເຂົາໄດ້ຖາມພວກເຂົາວ່າເຂົາໄປທາງໃດ? ບັດນີ້
ພວກລູກຊາຍໄດ້ຂອງເຂົາກໍໄດ້ຊີ້ທາງທີ່ຄົນຂອງພຣະເຈົ້າຜູມາຈາກຢູດາໄດ້ໄປ[13]ດັ່ງນັ້ນເຂົາຈຶ່ງໄດ້ເວົ້າກັບລູກຊາຍວ່າ“ ຈົ່ງຜູກອານລາໃຫ້ຂ້ອຍ“
ພວກເຂົາຈຶ່ງໄດ້ຜູກອານລາໃຫ້ລາວແລ້ວຈຶ່ງຂຶ້ນຂີ່ຫລັງລານັ້ນ
[14]ຜູ້ເຜີຍໄດ້ໄປຕາມທາງທີ່ຄົນຂອງພຣະເຈົ້າໄປ ແລະໄດ້ພົບເຂົາກຳລັງນັ່ງຢູ່ຕົ້ນໂອກຕົ້ນຫນຶ່ງແລະເຂົາຈຶ່ງເວົ້າກັບເຂົາວ່າ
“ທ່ານເປັນຄົນຂອງພຣະເຈົ້າທີ່ມາຈາກຢູດາບໍ? ເຂົາໄດ້ຕອບວ່າ“ ແມ່ນຂ້ອຍເອງ“[15]ແລ້ວຜູ້ເຜີຍວັດຈະນະເວົ້າກັບເຂົາວ່າ“
ເຊີນໄປບ້ານກັບຂ້ອຍແລະກິນອາຫານ“[16]ຄົນຂອງພຣະເຈົ້າໄດ້ເວົ້າວ່າ“ຂ້ານ້ອຍຈະກັບໄປກັບທ່ານບໍ່ໄດ້
ຂ້ານ້ອຍຈະກິນອາຫານຫລືດື່ມນ້ຳກັບທ່ານທີ່ນີ້ກໍບໍ່ໄດ້[17]ເພາະວັດຈະນະຂອງພຣະຢາເວໄດ້ ກ່າວກັບຂ້ານ້ອຍວ່າ
ຢ່າກິນອາຫານຫລືດື່ມນ້ຳທີ່ນັ້ນຫລືກັບໄປທາງທີ່ເຈົ້າມາ““
[18]ດັ່ງນັ້ນຜູ້ເຜີຍວັດຈະນະຈຶ່ງເວົ້າວ່າ “ຂ້ານ້ອຍກໍເປັນຜູ້ເຜີຍວັດຈະນະຄືກັນກັບທ່ານ ມີທູດສະຫວັນຂອງພຣະຢາເວອົງຫນຶ່ງໄດ້ບອກຂ້ານ້ອຍວ່າ
ຈົ່ງພາເຂົາກັບບ້ານກັບເຈົ້າ ເພື່ອເຂົາຈະໄດ້ກິນອາຫານກັບດື່ມນ້ຳ““
ແຕ່ເຂົາຕວະຄົນຂອງພຣະເຈົ້າ[19]ດັ່ງນັ້ນຄົນຂອງພຣະເຈົ້າຈຶ່ງໄດ້ກັບໄປກັບຜູ້ເຜີຍວັດຈະນະແລະໄດ້ກິນອາຫານແລະດື່ມນ້ຳໃນບ້ານຂອງເຂົາ
[20]ຂະນະທີ່ເຂົານັ່ງຢູ່ໂຕະ
ພຣະວັດຈະນະຂອງພຣະຢາເວໄດ້ມາຍັງຜູ້ເຜີຍພຣະວັດຈະນະຜູ້ໄດ້ນຳເຂົາກັບມາ[21]ແລະເຂົາໄດ້ຮ້ອງມາຍັງຄົນຂອງພຣະເຈົ້າຜູ້ມາຈາກຢູດາວ່າ“
ພຣະຢາເວກ່າວດັ່ງນີ້ວ່າ“ ພຣະເຈົ້າບໍ່ໄດ້ເຊື່ອຟັງວັດຈະນະຂອງພຣະຢາເວ
ແລະບໍ່ໄດ້ຮັກສາບັນຍັດຂອງພຣະຢາເວພຣະເຈົ້າຂອງເຈົ້າໄດ້ບັນຊາເຈົ້າ[22]ແຕ່ເຈົ້າໄດ້ກັບມາແລະກິນອາຫານແລະໄດ້ດື່ມນ້ຳ“
ໃນທີ່ຊຶ່ງພຣະອົງຕັດກັບເຈົ້າມາ “ ຢ່າຮັບປະທານອາຫານຫລືດື່ມນ້ຳ“ ສົບຂອງເຈົ້າຈະບໍ່ໄດ້ຝັງຢູ່ອຸໂມງຂອງບັນພະບູລຸດຂອງເຈົ້າ“
[23]ຕໍ່ມາຫລັງຈາກເຂົາໄດ້ກິນອາຫານແລະດື່ມນ້ຳແລ້ວ
ເຂົາກໍຜູກອານລາໃຫ້ແກ່ຄົນຂອງພຣະເຈົ້າຜູ້ທີ່ເຂົາໄດ້ພາກັບມາ[24]ເມື່ອຄົນຂອງພຣະເຈົ້າໄດ້ໄປມີສິງໂຕໄດ້ມາກັດແລະຂ້າເຂົາ
ແລະສົບຂອງເຂົາກໍໄດ້ຖືກຖິ້ມໄວ້ຂ້າງທາງ ແລະລາໂຕນັ້ນກໍໄດ້ຢືນຢູ່ຂ້າງໆ ສົບດ້ວຍ[25]ເມື່ອພວກຜູ້ຊາຍຜ່ານໄປໄດ້ເຫັນສົບຖິ້ມຢູ່ຂ້າງທາງ
ແລະສິງໂຕກຳລັງຢືນຢູ່ຂ້າງສົບນັ້ນ ພວກເຂົາກໍໄດ້ມາແລະເວົ້າກັນໃນເມືອງທີ່ຜູ້ເຜີຍພຣະວັດຈະນະໄດ້ຢູ່ນັ້ນ
[26]ເມື່ອຜູ້ເຜີຍພຣະວັດຈະນະຜູ້ທີ່ນຳເຂົາກັບມາຈາກທາງໄດ້ຮູ້ວ່າ ນັ້ນແມ່ນຄົນຂອງພຣະເຈົ້າ
ຜູ້ບໍ່ເຊື່ອຟັງພຣະວັດຈະນະຂອງພຣະຢາເວເພາະສະນັ້ນພຣະຢາເວໄດ້ຊົງມອບທ່ານໄວ້ກັບສິງໂຕ ຊຶ່ງໄດ້ກັດສີກທ່ານອອກເປັນຊິ້ນໆ
ແລະໄດ້ຂ້າທ່ານ ຕາມພຣະວັດຈະນະພຣະຢາເວໄດ້ເຕືອນຕໍ່ທ່ານ[27]ດັ່ງນັ້ນຜູ້ເຜີຍພຣະວັດຈະນະໄດ້ເວົ້າກັບລູກຊາຍຂອງເຂົາວ່າ“
ຈົ່ງຜູກອານລາໃຫ້ຂ້ອຍ“ ແລ້ວພວກເຂົາກໍໄດ້ຜູກອານລາໃຫ້[28]ເຂົາຈຶ່ງໄດ້ໄປແລະໄດ້ພົບສົບນັ້ນຖິ້ມຢູ່ຂ້າງທາງ
ແລະລາກັບສິງໂຕກໍກຳລັງຢືນຢູ່ຂ້າງສົບ ສິງໂຕບໍ່ໄດ້ກິນສົບນັ້ນຫລືໄດ້ຂ້າລານັ້ນ
[29]ຜູ້ເຜີຍພຣະວັດຈະນະກໍໄດ້ເອົາສົບຄົນຂອງພຣະເຈົ້າຂຶ້ນຫລັງລາ ແລ້ວໄດ້ນຳກັບມາເຂົາໄດ້ມາຍັງເມືອງຂອງຕົນ
ເພື່ອໄວ້ທຸກແລະຝັງເຂົາ[30]ແລ້ວເຂົາໄດ້ວາງສົບນັ້ນໃນອຸບໂມງຝັງສົບຂອງຕົນເອງແລະພວກເຂົາໄດ້ໄວ້ທຸກໃຫ້ເຂົາກ່າວວ່າອານິຈານ້ອງຊາຍຂອງຂ້າເອີຍ“
[31]ຫລັງຈາກເຂົາໄດ້ຝັງເຂົາແລ້ວ ຜູ້ເຜີຍພຣະວັດຈະນະກໍໄດ້ເວົ້າກັບພວກລູກຊາຍຂອງຕົນວ່າ“ ເມື່ອພໍ່ຕາຍ
ຈົ່ງຝັງພໍ່ໄວ້ໃນອຸບໂມງຝັງສົບທີ່ຄົນຂອງພຣະເຈົ້ານັ້ນຈົ່ງວາງກະດູກຂອງພໍ່ໄວ້ຂ້າງກະດູກຂອງເຂົາ[32]ເພາະວ່າຖ້ອຍຄຳທີ່ເຂົາໄດ້ປະກາດໂດຍພຣະວັດຈະນະຂອງພຣະ
ກ່າວໂທດແທ່ນບູຊາໃນເບັດເອນ ແລະກ່າວນິເວດທຸກແຫ່ງຂອງສະຖານສູງຊຶ່ງຢູ່ໃນເມືອງຕ່າງໆ ຂອງສະມາເຣຍ ຈະເກີດຂຶ້ນຢ່າງແນ່ນອນ
[33]ຫລັງຈາກເຫດການເຫລົ່ານີ້ ເຢໂຣໂບອາມ ໄດ້ຫັນກັບຈາກທາງຊົ່ວຂອງລາວ ແຕ່ໄດ້ແຕ່ງຕັ້ງປະໂຣຫິດຈາກຄົນທົ່ວໄປເປັນສະຖານສູງຕ່າງໆ
ໃນທ່າມກາງປະຊາຊົນຕໍ່ໄປເລື້ອຍໆ


generated on Tue Jun 17 19:01:42 2025

ຜູ້ໃດທີ່ສະຖາປະນາຮັບໃຊ້ພຣະອົງກໍໄດ້ຊົງແຕ່ງຕັ້ງເຂົາໃຫ້ເປັນປະໂຣຫິດ 34 ແລະສິ່ງນີ້ໄດ້ເປັນບາບແກ່ຣາຊວົງເຢໂຣໂບອາມ
ແລະເປັນເຫດໃຫ້ຖືກທຳລາຍແລະລ້າງຜານຣາຊວົງນັ້ນຫມົດຈາກແຜ່ນດິນໂລກ

14 [1]ໃນເວລານັ້ນ ອາບີຢາ ລູກຊາຍຂອງເຢໂຣໂບອາມໄດ້ເຈັບປ່ວຍ[2]ເຢໂຣໂບອາມ ໄດ້ສັ່ງເມຍຂອງຕົນວ່າ“ ຈົ່ງລຸກຂຶ້ນແລະປອມຕົວຂອງເຈົ້າ
ເພື່ອຈະບໍ່ໃຫ້ໃຜຈື່ເຈົ້າໄດ້ ແລະໄປທີ່ເມືອງຊີໂລເພາະອາຫີຢາຜູ້ເຜີຍພຣະວັດຈະນະຢູ່ທີ່ນັ້ນ ທ່ານເປັນຜູ້ໃດກ່າວເລື່ອງເຮົາວ່າ
ເຮົາຈະໄດ້ເປັນກະສັດເຫນືອປະຊາຊົນນີ້[3]ເຈົ້າຈົ່ງເອົາເຂົ້າຫນົມປັງສິບກ້ອນ ຂະຫນົມຫວານແນ່ ແລະນໍ້າເຜີ້ງຫນຶ່ງໃຫ ໄປຫາອາຫີຢາ
ທ່ານຈະບອກເຈົ້າວ່າຈະມີຫຍັງເກີດຂຶ້ນກັບລູກ“

[4]ເມຍຂອງເຢໂຣໂບອາມກໍໄດ້ເຮັດຕາມນັ້ນນາງຈຶ່ງໄປເມືອງຊີໂລແລະໄປບ້ານອາຮີຢາ ບັດນີ້ ອາຮີຢາເບິ່ງບໍ່ເຫັນ
ເພາະທ່ານເຖົ້າແກ່ລາຍ[5]ພຣະຢາເວໄດ້ກ່າວກັບອາຮີຢາວ່າ“ ເບິ່ງເມຍຂອງເຢໂຣໂບອາມກຳລັງມາ ເພື່ອຈະຖາມເລື່ອງລູກຂອງນາງ
ເພາະເດັກນ້ອຍນັ້ນບໍ່ສະບາຍ ໃຫ້ເຈົ້າຕອບນາງແນວນີ້ ເມື່ອນາງມາຮອດ ນາງກໍຈະເຮັດໂຕຄືເປັນຄົນອື່ນໆ“
[6]ເມື່ອອາຮີຢາໄດ້ຍິນສຽງໄດ້ຍິນສຽງບາດຕີນຂອງນາງມາຮອດເພິ່ນຈຶ່ງເວົ້າວ່າເຂົ້າມາທາງໃນພີ່ເປັນຫຍັງຄືເຮັດທ່າທີເປັນຄົນອື່ນຄືບໍ່ເຮັດເປັນໂຕເອງລະ?
ຂ້ອຍມີຂ່າວຈະບອກເຈົ້າ[7]ຂໍໃຫ້ເຈົ້າໄປບອກເຢໂຣໂບອາມວ່າ ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນກ່າວດັ່ງນີ້ວ່າ“
ເຮົາໄດຍົກເຈົ້າຂຶ້ນຈາກທ່າມກາງປະຊາຊົນ
ແລະເຮັດໃຫ້ເຈົ້າເປັນປະມຸກເຫນືອອິດສະຣາເອນປະຊາຊົນຂອງ[8]ເຮົາໄດ້ສີກຣາຊອານາຈັກຈາກຣາຊວົງຂອງດາວິດຜູ້ຮັບໃຊ້ຂອງເຮົາຜູ້ທີ່ໄດ້ຮັກສາພຣະບັນຍັດທັ
[9]ແຕ່ເຈົ້າໄດ້ເຮັດຊົ່ວຫຍິ່ງກວ່າຄົນທີ່ຢູ່ກ່ອນເຈົ້າ
ເຈົ້າໄດ້ສ້າງພຣະອື່ນແລະຮູບຫລໍ່ໂລຫະແລະເຮັດໃຫ້ເຮົາໃຈຮ້າຍແລະເຮົາໄດ້ຖິ້ມເບື້ອງຫລັງຂອງເຈົ້າ[10]ເພາະສະນັ້ນ ເບິ່ງສາ
ເຮົາຈະນຳໄພພິບັດມາເຫນືອຣາຊວົງຂອງເຈົ້າ ເຮົາຈະຕັດຊາຍທຸກຄົນໃນອິດສະຣາເອນທັງທາດແລະເສລີ
ແລະເຮົາຈະເຜົາຜານຣາຊວົງຂອງເຈົ້າຢ່າງທີ່ຄົນເຜົາຂີ້ສັດໃຫ້ໄຫມ້ຈົນຫມົດ
[11]ຜູ້ໃດທີ່ເປັນຄົນໃນຣາຊວົງຂອງເຈົ້ານາຍມີຕາຍໃນເມືອງ ກໍຈະຖືກຫມາກັດກິນ ແລະໃຜກໍຕາມທີ່ຕາຍໃນທົ່ງນານົກອາກາດຈະກິນ
ເພາະພຣະຢາເວໄດ້ກ່າວໄວ້[12]ເພາະສະນັ້ນເມຍຂອງເຢໂຣໂບອາມຈຶ່ງສະເດັດໄປເມືອງຂອງນາງ ເມື່ອພຣະຢາເວຂອງນາງສະເດັດເຂົ້າເມືອງ
ລູກຂອງນາງກໍຕາຍ[13]ແລ້ວອິດສະຣາເອນຈະໄວ້ທຸກໃຫ້ແລະຣາຊວົງຂອງເຢໂຣໂບອາມນັ້ນຍັງພົບບາງສິ່ງທີ່ພໍພຣະໄທພຣະເນດຂອງພຣະຢາເວພຣະເຈົ້າແຫ່ງອິດສ
[14]ບັດນີ້ ພຣະຢາເວຈະຊົງຕັ້ງກະສັດກອົງຫນຶ່ງເຫນືອອິດສະຣາເອນ ຜູ້ຈະກຳຈັດຣາຊວົງຂອງເຢໂຣໂບອາມໃນວັນນັ້ນດ້ວຍ
ວັນນັ້ນຄືວັນນີ້ຕັ້ງແຕ່ໄປນີ້[15]ເພາະພຣະຢາເວຈະຊົງຕີອິດສະຣາເອນຄືຕົ້ນອໍ້ທີ່ຢູ່ໃນນໍ້າ
ແລະຈະຊົງຖອນຮາກອິດສະຣາເອນອອກສຽງຈາກແຜ່ນດິນອັນດີນີ້ ຊຶ່ງພຣະອົງປະທານແກ່ບັນພະບູລຸດຂອງພວກເຮົາ
ພຣະອົງຈະກະຈາຍພວກເຂົາໃຫ້ພົ້ນແມ່ນໍ້າເອີຟຣັດໄປ ເພາະເຂົາທັງຫລາຍໄດ້ສ້າງບັນດາເສົາພະອາເຊຣາ
ຊຶ່ງເຮັດໃຫ້ພຣະຢາເວພິໂຣດ[16]ພຣະອົງຈະຊົງມອບອິດສະຣາເອນໄວ້ເພາະບາບຂອງເຢໂຣໂບອາມຊຶ່ງທ່ານອົງໄດ້ເຮັດ
ແລະເຮັດໃຫ້ອິດສະຣາເອນເຮັດບາບດ້ວຍ“
[17]ດັ່ງນັ້ນເມຍຂອງເຢໂຣໂບອາມໄດ້ຊົງລຸກຂຶ້ນ ຈາກໄປ ແລະໄປເຖິງເມືອງຕີຣະຊາ ພໍນາງຍ່າງເຂົ້າໄປໃນເຮືອນ
ເມື່ອນາງໄປຮອດປະຕູເຮືອນຂອງນາງ
ລູກຊາຍຂອງນາງກໍຕາຍ[18]ຕາມພຣະວັດຈະນະຂອງພຣະຢາເວຊຶ່ງກ່າວທາງຮັບໃຊ້ຂອງພຣະອົງຄືອາຫີຢາຜູ້ເຜີຍພຣະວັດນະ
[19]ສ່ວນພາລະກິດອື່ນໆ ຂອງເຢໂຣໂບອາມເລື່ອງພຣະອົງໄດ້ຊົງເຮັດເສິກ ແລະຊົງຄອບຄອງຢ່າງໃດນັ້ນ ເບິ່ງແມະ
ໄດ້ບັນທຶກໄວ້ໃນຫນັງສືກະສັດແຫ່ງອິດສະຣາເອນ[20]ເຢໂຣໂບອາມໄດ້ຂຶ້ນປົກຄອງເປັນເວລາຊາວສອງປີ
ແລ້ວໄດ້ຊົງລ່ວງຫລັບໄປຢູ່ກັບບັນພະບູລຸດຂອງພຣະອົງແລະນາດາບພະຣາຊໂອຣົດຂອງພະອົງ ກໍຂຶ້ນເປັນກະສັດແທນທີ່ຂອງພຣະອົງ
[21]ບັດນີ້ ເຣໂຫໂບອາມ ລູກຂອງໂຊໂລໂມນ ໄດ້ຄອງຣາດໃນຢູດາ ເມື່ອເຣໂຫໂບອາມຊົງເປັນກະສັດນັ້ນ ພະອົງມີອະຍຸສີ່ສິບເອັດພັນສາ
ແລະໄດ້ຄອງຣາດສິບເຈັດປີໃນກຸງເຢຣູຊາເລັມ ຊຶ່ງເປັນເມືອງທີ່ພຣະຢາເວຊົງເລືອກໃຫ້ເຜົ່າທັງຫມົດຂອງອິດສະຣາເອນ
ເພື່ອພຣະນາມຂອງພຣະອົງຢູ່ທີ່ນັ້ນ ພຣະມານດາຂອງພຣະອົງມີພະນາມວ່າ ນາອາມານ
ເປັນຄົນອັບໂມນ[22]ຢູດາໄດ້ເຮັດຊົ່ວໃນສາຍພຣະເນດພຣະຢາເວ ພວກເຂົາໄດ້ເຮັດໃຫ້ພຣະອົງ່ຜໍໃຈເພາະບາບທີ່ພວກເຂົາໄດ້ເຮັດນັ້ນ
ຫຍິ່ງກວ່າທຸກສິ່ງທີ່ບັນພະບູລຸດໄດ້ເຮັດທັງຫມົດ
[23]ເພາະພວກເຂົາໄດ້ສ້າງສິ່ງເຫລົ່ານີ້ໃຫ້ໂຕເອງ ຄືສະຖານສູງ ເສົາສັກສິດ ແລະບັນດາເສົາອາເຊຣາ ທີ່ເທິງໂນນພູສູງທຸກເນີນ
ແລະກ້ອງຕົ້ນໄມ້ຂຽວທຸກຕົ້ນ[24]ຫຍິ່ງກວ່ານັ້ນໄດ້ມີຍິງໂສເພນີໃນພິທີສາດສະຫນາໃນແຜ່ນດິນນັ້ນດ້ວຍ
ພວກເຂົາໄດ້ເຮັດສິ່ງທີ່ຫນ້າກຽດທຸກຢ່າງຂອງບັນດາປະຊາຊາດ ຊຶ່ງພຣະຢາເວໄດ້ໄລ່ເຂົາອອກໄປໃຫ້ພົ້ນຫນ້າປະຊາຊົນອິດສະຣາເອນ
[25]ທີ່ນີ້ໄດ້ເກີດຂຶ້ນໃນປີທີຫ້າແຫ່ງກະສັດເຣໂຫໂບອາມ
ຊີຊັກກະສັດອີຢິບໄດ້ສະເດັດຂຶ້ນມາຮົບກັບກຸງເຢຣູຊາເລັມ[26]ພຣະອົງໄດ້ຊົງເອົາຊັບສົມບັດແຫ່ງພຣະນິເວດຂອງພຣະຢາເວ
ແລະຊັບສົມບັດແຫ່ງພະຣາຊວັງກະສັດພຣະອົງໄດ້ຊົງເອົາໄປທຸກຢ່າງພຣະອົງໄດ້ຊົງເອົາໂລ່ທອງຄຳທັງຫມົດທີ່ໂຊໂລໂມນໄດ້ຊົງສ້າງໄວ້ນັ້ນໄປດ້ວຍ
[27]ກະສັດເຣໂຫໂບອາມໄດ້ຊົງເຮັດໂລ່ທອງສຳຣິດຂຶ້ນແທນທີ່ແລະມອບໄວ້ໃນການດູແລຂອງພວກຜູ້ບັນຊາການທະຫານຮັກສາພະອົງ
ຜູ້ໄດ້ເຝົ້າດູແລປະຕູພະຣາຊວັງ[28]ເມື່ອໃດກໍຕາມທີ່ກະສັດໄດ້ໄປພຣະນິເວດຂອງພຣະຢາເວ ທະຫານຮັກສາພະອົງກໍຖືໂລ້ອອກມາ
ແລ້ວນຳກັບໄປໄວ້ໃນປ້ອມຂອງທະຫານຮັກສາພະອົງຄືເກົ່າ
[29]ສ່ວນເລື່ອງອື່ນໆທີ່ກ່ຽວຂ້ອງກັບເຣໂຫໂບອາມ ແລະທຸກສິ່ງທີ່ພະອົງໄດ້ເຮັດ ໄດ້ບັດທຶກໄວ້ໃນຫນັງສື ກະສັດຢູດາແລ້ວບໍ່ແມ່ນຫວາ?
[30]ມີສົງຄາມຕະຫລອດລະຫວ່າງເຣໂຫໄໂບອາມກັບເຢໂຣໂບອາມ[31]ດັ່ງນັ້ນເຣໂຫໂບອາມກໍໄດ້ລ່ວງຫລັບໄປກັບບັນພະບູລຸດຂອງທ່ານ
ແລະຝັງສົບໄວ້ກັບບັນພະບູລຸດຂອງທ່ານໃນຄົດດາວິດມີແມ່ຊື່ວ່ານາອາມານ ເປັນຄົນອາມໂມນ
ອາບີຢາຜູ້ເປັນລູກກໍໄດ້ຂຶ້ນເປັນກະສັດແທນທີ່ຂອງພຣະອົງ


generated on Tue Jun 17 19:01:42 2025

## 15

[1]ໃນຣາຊການປີທີສິບແປດຂອງກະສັດ ອາບີຢາໄດ້ຊົງເລີ່ມປົກຄອງເຫນືອຢູດາ[2]ພຣະອົງໄດ້ຊົງຄອງຣາດຢູ່ໃນເມືອງເຢຣູຊາເລັມສາມປີ
ມີແມ່ຊື່ວ່າ ມາອາຄານາງເປັນລູກຂອງອາບີຊາໂລມ[3]ພຣະອົງໄດ້ຊົງເຮັດບາບເຊັ່ນດຽວກັນກັບລູກຂອງພະອົງທີ່ຊົງເຮັດກ່ອນສະໄຫມຂອງພະອົງ
ແລະບໍ່ໄດ້ມີໃຈພັກດີແນ່ວແນ່ຕໍ່ພຣະຢາເວພຣະເຈົ້າຂອງພວກພະອົງຄືຈິດໃຈຂອງດາວິດບັນພະບູລຸດຂອງພຣະອົງທີ່ໄດ້ຊົງເຮັດ

[4]ແຕ່ເພື່ອເຫັນແກ່ດາວິດ ພຣະຢາເວພຣະເຈົ້າຂອງເຂົາໄດ້ປະທານດວງປະທີບດວງຫນຶ່ງໃນເຢຣູຊາເລັມ
ໂດຍໃຫ້ລູກສອງຄົນໄດ້ຂຶ້ນມາປົກຄອງຕໍ່
ແລະເຮັດໃຫ້ເຢຣູຊາເລັມເຂັ້ມແຂງ[5]ພຣະເຈົ້າໄດ້ເຮັດສິ່ງນີ້ເພາະດາວິດໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍຕາຂອງພຣະອົງ ຕະຫລອດຊີວິດຂອງເພິ່ນ
ເພິ່ນໄດ້ປະຕິບັດຕາມຄຳສັ່ງຂອງພຣະອົງທຸກຢ່າງ ຍົກເວັ້ນເລື່ອງທີ່ກ່ຽວກັບອູຣີຢາຊາວຮິດຕີ[6]ບັດນີ້ ມີສົງຄາມລະຫວ່າງ
ເຣໂຫໂບອາມກັບເຢໂຣໂບອາມ ຕະຫລອດຊີວິດຂອງອາບີຢາ.
[7]ເຫດການອື່ນໆ ກະສັດອາບີຢາໄດ້ເຮັດແມ່ນໄດ້ຖືກບັນທຶກໄວ້ໃນຈົດຫມາຍແຫ່ງກະສັດຢູດາບໍ່ແມ່ນບໍ?
ແລະມີສົງຄາມລະຫວ່າງອາບີຢາກັບເຢໂຣໂບອາມ[8]ອາບີຢາໄດ້ຕາຍໄປຢູ່ກັບບັນພະບູລຸດຂອງຕົນແລະພວກເຂົາໄດ້ຝັງພະອົງໄວ້ໃນເມືອງດາວິດ
ແລ້ວອາສາລູກຂອງພະອົງຂຶ້ນເປັນກະສັດແທນ
[9]ໃນປີທີຊາວຂອງຣາຊການເຢໂຣໂບອາມກະສັດແຫ່ງອິດສະຣາເອນອາສາໄດ້ເລີ່ມປົກຄອງເຫນືອຢູດາ[10]ພະອົງໄດ້ຊົງຄອງຣາດຢູ່
ສີ່ສິບເອັດປີໃນກຸງເຢຣູຊາເລັມ ແມ່ຕູ້ຂອງພະອົງຄືມາອາຄາ
ລູກຜູ້ຍິງຂອງອາບີຊາໂລມ[11]ອາສາໄດ້ຊົງເຮັດສິ່ງທີ່ຖືກຕ້ອງໃນສາຍພຣະເນດຂອງພຣະຢາເວຄືດາວິດບັນພະບູລຸດຂອງເຮົາໄດ້ເຮັດ
[12]ອາສາໄດ້ເນລະເທດໂສເພນີປະຈຳສາດສະຫນາອອກໄປຈາກດິນແດນ
ແລະໄດ້ທຳລາຍຮູບເຄົາລົບທັງປວງທີ່ບັນພະບູລຸດໄດ້ສ້າງຂຶ້ນ[13]ພະອົງໄດ້ຊົງຖອດນາງມາອາຄາແມ່ຕູ້ຂອງພຣະອົງອອກຈາກຕຳແຫນ່ງພະພັນປີຫລວງ
ເພາະເຈົ້ານາງໄດ້ສ້າງເສົາອາເຊຣາອັນຫນ້າລັງກຽດ ອາສາໄດ້ທຳລາຍເສົານັ້ນແລະເຜົາຖິ້ມທີ່ພູເຂົາຂີດໂຣນ
[14]ແມ່ພະອົງໄດ້ຮື້ສະຖານທີ່ບູຊາເທິງທີ່ສູງທັງຫລາຍຖິ້ມ
ແຕ່ໃຂໃຈຂອງອາສາກໍພັກດີແນ່ວແນ່ຕໍ່ພຣະຢາເວຕະຫລອດຊີວິດ[15]ພຣະອົງໄດ້ຊົງນຳເງິນແລະທອງແລະພາຊະນະຕ່າງໆ
ຊຶ່ງພະອົງກັບຣຊາບິດາໄດ້ຖວາຍແກ່ພຣະເຈົ້າມາໄວ້ໃນພຣະວິຫານຂອງພຣະຢາເວ
[16]ສົງຄາມລະຫວ່າງອາສາກັບບາອາຊາກະສັດແຫ່ງອິດສະຣາເອນຕະຫລອດຣາຊການ[17]ບາອາຊາກະສັດແຫ່ງອິດສະຣາເອນໄດ້ມາສູ້ຮົບກັບຢູດາ
ແລະບາອາຊາໄດ້ຊົງສ້າງປ້ອມປາການທີ່ເມືອງຣາມາເພື່ອໄດ້ຊົງປິດທາງເຂົ້າອອກສູ່ແດນຂອງກະສັດອາສາແຫ່ງຢູດາ
[18]ແລ້ວອາສາຈຶ່ງໄດ້ນຳເງິນແລະທອງຄຳທີ່ເຫລືອທັງຫມົດຈາກຄັງພຣະວິຫານຂອງພຣະຢາເວ
ແລະຈາກຫ້ອງພະຄັງຂອງຣາຊວັງຂອງກະສັດພະອົງໄດ້ຊົງນຳມາມອບໃຫ້ຂ້າຣາຊ
ບໍລິວານນຳໄປຖວາຍກະສັດເບັນຮາດາດແຫ່ງອາຣາມຊຶ່ງປົກຄອງຢູ່ໃນເມືອງດາມັສກັດ ເບັນຮາດັດນີ້ເປັນລູກຂອງຣິມໂມນ
ຊຶ່ງເປັນລູກຂອງເຮຊີໂອນ ກະສັດອາສາໄດ້ເວົ້າວ່າ[19]ຂໍໃຫ້ເຮົາເປັນພັນທະມິດກັນຄືຣາຊບິດາຂອງເຮົາທັງສອງ
ຂ້ານ້ອຍສົ່ງເງິນແລະທອງນີ້ມາແດ່ທ່ານ ຂໍໃຫ້ທ່ານໄດ້ຊົງຕັດສຳພັນໄມຕີກັບມາອາຊາກະສັດແຫ່ງອິດສະຣາເອນ
ເພື່ອເຂົາຈະຖອຍທັບໄປຈາກຂ້ານ້ອຍ"
[20]ເບັນຮາດາດໄດ້ຊົງເຫັນດີກັບກະສັດອາສາ ແລະໄດ້ສົ່ງແມ່ທັບແລະກອງກຳລັງໄປໂຈມຕີເມືອງຕ່າງໆ
ຂອງອິດສະຣາເອນໄດ້ຊົງພິຊິດເມືອງອີໂຢນ ດານ ອາເບເບ ມາອາຄາ
ດິນເນເຣັດທັງຫມົດລວມທັງນັບທາລີ[21]ເມື່ອບາອາຊາໄດ້ຊົງຮູ້ເລື່ອງນີ້ກໍຢຸດສ້າງເມືອງຣາມາ
ແລ້ວໄດ້ຖອຍທັບໄປຍັງຕີຣະຊາ[22]ຈາກນັ້ນກະສັດອາສາອອກຄຳສັ່ງໄປທົ່ວອານາຈັກໃນຢູດາ
ບໍ່ເວັ້ນຜູ້ໃດເລີຍໃຫ້ພວກເຂົາຊ່ວຍກັນຂົນຫີນແລະໄມ້ຊຶ່ງບາອາຊາໄດ້ຊົງໃຊ້ຢູ່ທີ່ເມືອງຣາມາ
ແລ້ວກະສັດອາສາໄດ້ຊົງນຳໄປສ້າງເມືອງເກບາໃນແດນເບັນຢາມິນແລະເມືອງມິດສະປາ
[23]ເຫດການອື່ນໆໃນຣາຊການອາສາຄວາມສຳເລັດທັງຫລາຍ ພາລະກິດທັງຫມົດ ແລະເມືອງຕ່າງໆ
ທີ່ໄດ້ສ້າງຂຶ້ນມີບັນທຶກໃນກົດຫມາຍກະສັດແຫ່ງຢູດາບໍ່ແມ່ນບໍ?
ເມື່ອອາສາໄດ້ເຖົ້າແລ້ວໄດ້ຕາຍຍ້ອນພະຍາດຂອງລາວ[24]ແລ້ວອາສາກໍໄດ້ຕາຍໄປຢູ່ກັບບັນພະບູລຸດ ແລ້ວໄດ້ຖືກຝັງໄວໃນເມືອງດາວິດ
ແລະເຢໂຮຊາຟັດລູກຂອງທ່ານໄດ້ເປັນກະສັດແທນ
[25]ນາດາບລູກຂອງເຢໂຣໂບອາມໄດ້ຊົງປົກຄອງເຫນືອອິດສະຣາເອນ ຖືກກັບກັບປີທີສອງຂອງຣາຊການກະສັດແຫ່ງຢູດາ
ໄດ້ຊົງປົກຄອງເຫນືອອິດສະຣາເອນສອງປີ[26]ພະອົງໄດ້ຊົງເຮັດສິ່ງຊົ່ວຮ້າຍໃນສາຍພະເນດຂອງພຣະຢາເວ
ດຳເນີນຕາມວິຖີແລະບາບຂອງຣາຊບິດາ ຊຶ່ງຊັກນຳອິດສະຣາເອນໃຫ້ເຮັດບາບຕາມ
[27]ຝ່າຍອາບາຊາລູກຊາຍຂອງອາຫິຢາເຜົ່າອິດສະຄາວາງແຜນແລະລົງມືສັງຫານນາດັບ ຂະນະທີ່ໄດ້ຮ່ວມກັບກອງທັບ
ອິດສະຣາເອນລ້ອມເມືອງກິບເບໂທນໃນຟີລິດສະຕີນ[28]ໃນປີທີສາມຂອງຣາຊການຂອງອາສາ ກະສັດແຫ່ງຢູດາ
ບາອາຊາໄດ້ປົງພຣະຊົນນາດັບແລ້ວຂຶ້ນຄອງຣາຊແທນ
[29]ທັນທີທີ່ພະອົງເປັນກະສັດ ບາອາຊາກໍໄດ້ຂ້າຄົນທຸກຄົນໃນຄອບຄົວ ຂອງເຢໂຣໂບອາມ ບໍ່ປ່ອຍໃຫ້ໃຜລອດຊີວິດເລີຍ
ເປັນໄປຕາມພຣະຢາເວໄດ້ກ່າວໄວ້ຜ່ານທາງອາຫີຢາ
ຊາວຊີໂລຜູ້ຮັບໃຊ້ຂອງພະອົງ[30]ເພາະບາບທີ່ເຢໂຣໂບອາມໄດ້ເຮັດແລະຊັກນຳອິດສະຣາເອນໃຫ້ເຮັດຕາມ
ແລະເພາະເຂົາໄດ້ຊົງຍົວະໃຫ້ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນພິໂຣດ
[31]ເຫດການອື່ນໆ ໃນຣາຊການຂອງນາດັບແລະເພາະຣາຊກິດທັງປວງໄດ້ຊົງມີບັນທຶກໄວ້ໃນຈົດຫມາຍກະສັດແຫ່ງອິດສະຣາເອນບໍ່ແມ່ນຫວາ?
[32]ມີສົງຄາມລະຫວ່າງອາສາກັບບາອາຊາກະສັດແຫ່ງອິດສະຣາເອນ

33ໃນປີທີສາມຂອງຣາຊການອາສາກະສັດແຫ່ງຢູດາ
ບາອາຊາລູກຂອງອາຫີຢາໄດ້ຊົງປົກຄອງເຫນືອດິນແດນອິກສະຣາເອນທັງຫມົດທີ່ເມືອງຕີຣາຊາ
ໄດ້ປົກຄອງເຫນືອສີ່ສິບສີ່ປີ 34ບາອາຊາໄດ້ຊົງເຮັດສິ່ງທີ່ຊົ່ວໃນສາຍພຣະເນດຂອງພຣະຢາເວໄດ້ຊົງດໍາເນີນຕາມວິຖີແລະບາບຂອງເຢໂຣໂບອາມ
ຊຶ່ງພຣະອົງໄດ້ຊັກນໍາໃຫ້ອິດສະຣາເອນເຮັດບາບຕາມ

 generated on Tue Jun 17 19:01:42 2025

16 [1]ວັດຈະນະຂອງພຣະຢາເວໄດ້ມາເຖິງ ເຢຮູລູກຊາຍຂອງຮານານີ ໄດ້ກ່າວໂທດບາອາຊາວ່າ
"[2]ໃນເມື່ອເຮົາໄດ້ເຊີດຊູເຈົ້າຂຶ້ນມາຈາກພົ້ງສາລີ ແລະໄດ້ຕັ້ງເຈົ້າເປັນຜູ້ນຳເຫນືອອິດສະຣາເອນປະຊາຊົນຂອງເຮົາ
ເຈົ້າໄດ້ດຳເນີນຕາມທາງຂອງເຢໂຣໂບອາມ ແລະໄດ້ເຮັດໃຫ້ອິດສະຣາເອນຄົນຂອງເຮົາເຮັດບາບ
ເຮັດໃຫ້ເຮົາຢາກຮ້າຍດ້ວຍບາບຂອງເຂົາທັງຫລາຍ

[3]ເບິ່ງສາ ເຮົາຈະກວດລ້າງບາອາຊາ ແລະຣາຊວົງຂອງເຂົາໃຫ້ຫມົດ
ແລະເຮັດໃຫ້ຣາຊວົງຂອງເຢໂຣໂບອາມລູກຊາຍຂອງເນບັດ[4]ຫມາຈະກິນຜູ້ໃດກໍຕາມໃນຣາຊວົງບາອາຊາທີ່ຕາຍໃນເມືອງ
ແລະນົກໃນອາກາດຈະກິນຜູ້ໃດກໍຕາມທີ່ຕາຍໃນທົ່ງນາ"
[5]ສ່ວນເລື່ອງອື່ນໆ ຂອງບາອາຊາ ແລະສິ່ງທີ່ພະອົງໄດ້ຊົງເຮັດ ແລະພະຣາຊອຳນາຂອງພຣະອົງ
ໄດ້ບັນທຶກໄວ້ໃນຫນັງສືກະສັດແຫ່ງອິດສະຣາເອນບໍ່ແມ່ນຫວາ?[6]ບາອາຊາໄດ້ຊົງລ່ວງຫລັບໄປຢູ່ກັບບັນພະບູລຸດຂອງພະອົງ
ແລະໄດຝັງສົບໄວ້ທີ່ເມືອງຕີຣະຊາ ແລະເອລາລູກຂອງທ່ານກໍຂຶ້ນເປັນກະສັດແທນ
[7]ດັ່ງນັ້ນວັດຈະນະຂອງພຣະຢາເວໄດ້ມາໂດຍຜູ້ເຜີຍວັດຈະນະເຢຮູ ລູກຊາຍຂອງຮານານີ ກ່າວໂທດບາອາຊາ ແລະເຊື້ອສາຍພະອົງ
ທັງເລື່ອງຄວາມຊົ່ວທຸກຢ່າງທີ່ໄດ້ເຮັດໃນສາຍພະເນດພຣະຢາເວ ຄືເຮັດໃຫ້ພຣະອົງໃຈຮ້າຍດ້ວຍພະຣາຊກິດແຫ່ງມືຂອງພະອົງ
ທີ່ເປັນຄືຣາຊາວົງຂອງເຢໂຣໂບອາມ ແລະເພາະພະອົງໄດ້ຊົງທຳລາຍຣາຊວົງຂອງໂຢໂຣໂບອາມດ້ວຍ
[8]ໃນປີທີສິບຫົກແຫ່ງຣາຊການກະສັດອາສາກະສັດຢູດາ ເອລາລູກຂອງບາອາຊາໄດ້ເລີ່ມປົກຄອງເຫນືອອິດສະຣາເອນໃນເມືອງຕີຣະຊາ
ແລະທ່ານໄດຄອບຄອງຢູ່ສອງປີ[9]ຊີມຣີ ຂ້າຣາຊການຂອງພະອົງ ຊຶ່ງເປັນຜູ້ບັນຊາການກອງລົດມ້າສຶກເຄິ່ງຫນຶ່ງຂອງພະອົງ
ໄດ້ຕິດກະບົດຕໍ່ພຣະອົງ ບັດນີ້ເມື່ອພະອົງໄດ້ຢູ່ທີ່ເມືອງຕີຣະຊາກິນເຫລົ້າຈົນເມົາໃນບ້ານຂອງອາຣະຊາ
ຜູ້ເບິ່ງແຍງຮັກສາວັງ[10]ຊີມຣີໄດ້ເຂົ້າມາລອບຂ້າພະອົງ ພະອົງລົ້ມລົງແລ້ວປະຫານເລີຍໃນປີທີຊາວເຈັດແຫ່ງຣາຊການອາສາ ກະສັດຂອງຢູດາ
ແລ້ວກໍຂຶ້ນເປັນກະສັດແທນ
[11]ເມື່ອຊີມຣີໄດ້ເລີ່ມຄອງຣາຊແລະນັ່ງເທິງບັນລັງຂອງທ່ານ ທ່ານໄດ້ຊົງປະຫານຣາຊາວົງຂອງບາອາຊາ ພະອົງບໍ່
ໄດ້ເຫລືອຊາຍຈັກຄົນດຽວທັງທີ່ເປັນພີ່ນ້ອງສະນິດ ຫລືມິດສະຫາຍຂອງບາອາຊາເລີຍ[12]ດັ່ງນັ້ນຊີມຣີໄດ້ທຳລາຍຣາຊວົງຂອງບາອາຊາຈົນຫມົດ
ຕາມວັດຈະນະຂອງພຣະຢາເວຊຶ່ງໄດ້ກ່າວໂທດບາອາຊາໂດຍເຢຮູຜູ້ເຜີຍວັດຈະນະ[13]ເພາະບາບທັງຫລາຍຂອງບາອາຊາແລະບາບຂອງເອຣາ
ຣາຊາບຸອຣົດຂອງພະອົງຊຶ່ງໄດ້ເຮັດ ແລະຊົງເຮັດໃຫ້ອິດສະຣາເອນເຮັດບາບນຳ
ເຮັດໃຫ້ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນບໍ່ພໍໃຈນຳເລື່ອງຮູບເຄົາລົບຂອງພວກເຂົາ
[14]ສ່ວນເລື່ອງອື່ນໆຂອງເອຣາ ແລະທຸກສິ່ງຊຶ່ງພະອົງໄດ້ເຮັດ ໄດ້ບັນທຶກໄວ້ໃນຫນັງສືກະສັດແຫ່ງອິດສະຣາແອນບໍ່ ແມ່ນບໍ?
[15-16]ໃນປີທີສິບເຈັດແຫ່ງຣາຊການອາສາກະສັດແຫ່ງຢູດາ
ສີຣິມໄດ້ຊົງຄອງຣາດໄດ້ແຕ່ເຈັດວັນໃນເມືອງທີຣາຊບັດນີ້ກອງທັບຂອງຄົນຟີລິດສະຕິນ ເມື່ອ ກອງທັບ ຊຶ່ງຕັ້ງຄ້າຍຢູ່ນັ້ນໄດ້ຂ່າວວ່າ "
ຊີມຣີໄດ້ກະບົດແລະໄດ້ປົງພະຊົນກະສັດແລ້ວ "
ໃນວັນທີຄ້າຍອິດສະຣາເອນທັງຫລາຍຈຶ່ງຕັ້ງອິມຣີຜູ້ບັນຊາການກອງທັບໃຫ້ເປັນກະສັດເຫນືອອິດສະຣາເອນ[17]ອິມຣີແລະຄົນອິດສະຣາເອນທັງຫລາຍໄດ້ຂຶ້ນໄປຈາກ
ເຂົາທັງຫລາຍໄດ້ເຂົ້າລ້ອມເມືອງຕີຣະຊາ
[18]ດັ່ງນັ້ນ ເມື່ອອິມຣີໄດ້ຊົງເຫັນວ່າເມືອງນັ້ນແຕກແລ້ວ ພຣະອົງກໍໄດ້ສະເດັດເຂົ້າໄປໃນປ້ອມຂອງຣາຊວັງ ແລະໄດ້ເຜົາຣາຊວັງດ້ວຍໄຟ
ແລະດ້ວຍວິທີນີ້ພະອົງໄດ້ຕາຍໃນກອງໄຟ[19]ເພາະບາບຊຶ່ງພະອົງໄດ້ເຮັດໄວຄືໄດ້ເຮັດຊົ່ວໃນສາຍພຣະເນດຂອງພຣະຢາເວ
ໄດ້ດຳເນີນການຂອງເຢໂຣໂບອາມ ແລະດ້ວຍບາບຊຶ່ງພະອົງໄດ້ເຮັດທີ່ນຳອິດສະຣາເອນເຮັດບາບດ້ວຍ[20]ສ່ວນເລື່ອງນອກຂອງຊີມຣີ
ລວມທັງຫນັງສືເຫລົ່ານັ້ນແຫ່ງອິດສະຣາເອນບໍ່ແມ່ນຫວາ?
[21]ແລ້ວປະຊາຊົນອິດສະຣາເອນໄດ້ແບ່ງອອກເປັນສອງສ່ວນ ເຄິ່ງຫນຶ່ງປະຊາຊົນຕິຕາມທິບນີລູກາຍຂອງກີນັດ ແລະຍົກທ່ານຂຶ້ນເປັນກະສັດ
ແລະອີກຫນຶ່ງຕິດຕາມອິມຣີ[22]ແຕ່ປະຊາຊົນຕິດຕາມທິບນີລູກຊາຍຂອງກີຍັດ ດັ່ງນັ້ນທິບນີຈຶ່ງໄດ້ຕາຍ ແລະອິມຣີໄດ້ຂຶ້ນເປັນກະສັດ
[23]ອິມຣີໄດ້ເລີ່ມຄອງອິດສະຣາເອນໃນປີທີສາມສິບເອັດແຫ່ງຣາຊການປີທີສາມສິບເອັດແຫ່ງ່ງຣາຊການອາສາກະສັດແຫ່ງຢູດາ
ແລະພະອົງໄດ້ຊົງຄອງຢູ່ສິບສອງປີ ພະອົງໄດ້ຄອງຣາດໃນເມືອງຕີຣະຊາເປັນເວລາຫົກປີ[24]ພະອົງໄດ້ຊື້ພູເຂົາຊາມາເຣຍ
ຈາກເຊເຊເມດ້ວຍເງິນສອງຕະລັນພະອົງໄດ້ສ້າງເມືອງເທິງພູເຂົານັ້ນແລະໄດ້ເອີ້ນນາມເມືອງທີ່ສ້າງນັ້ນວ່າ ສະມາເຣຍ
ຕາມຊື່ຂອງເຊເມຜູ້ເປັນອາດີດພູເຂົານັ້ນ
[25]ອິມຣີໄດ້ເຮັດສິ່ງຊົ່ວຮ້ານໃນສາຍພະເນດຂອງພຣະຢາເວ
ແລະໄດ້ເຮັດຊົ່ວກວ່າບັນດາກະສັດຜູ້ຢູ່ກ່ອນພະອົງ[26]ເພາະພະອົງໄດ້ຊົງດຳເນີນຕາມທາງທັງຫລາຍຂອງເຢໂຣໂບອາມ ລູກຊາຍຂອງເນບັດ
ແລະຕະບາບຂອງພະອົງຊຶ່ງພະອົງນຳອິດສະຣາເອນເຮັດບາບດ້ວຍ ເຮັດໃຫ້ພຣະຢາເວແຫ່ງອິດສະຣາເອນບໍ່ພໍໃຈກັບບັນດາຮູບເຄົາລົບນັ້ນ
[27]ສ່ວນເລື່ອງອື່ນໆ ຂອງອິມຣີຊຶ່ງໄດ້ເຮັດແລະພະຣາຊອຳນາດຊຶ່ງໄດ້ຊົງສຳແດງໄດ້ບັນທຶກໄວ້ໃນຫນັງສືກະສັດແຫ່ງອິດສະຣາເອນບໍ່ແມ່ນບໍ?
[28]ດັ່ງນັ້ນອິມຣີໄດ້ລ່ວງຫລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະເຂົາຝັງພະສົບໄວ້ກຸງຊາມາເຣຍ
ແລະອາຫັບພະຣາຊໂອຣົດຂອງພະອົງກໍໄດ້ຂຶ້ນເປັນກະສັດແທນ
[29]ໃນປີທີສາມສິບແປດແຫ່ງຣາຊການອາສາກະສັດຂອງຢູດາ ອາຫັບພະຣາຊໂອຣົດຂອງອິມຣີໄດ້ປົກຄອງເຫນືອອິດສະຣາເອນ
ອາຮາບພະຣາຊໂອຣົດຂອງອົມຣີໄດ້ຊົງປົກຄອງເຫນືອອິດສະຣາເອນໃນກຸງສະມາເຣຍຊາວສອງປີ[30]ອາຮາບພະຣາຊໂອຣົດຂອງອິມຣີໄດ້ເຮັດຊົ່ວໃນສາຍພະເນດພ
ຫລາຍກວ່າບັນດາກະສັດຢູ່ກ່ອນ
[31]ການທີ່ອາຮາບໄດ້ຊົງດຳເນີນຕາມບາບຂອງເຢໂຣໂບອາມລູກຊາຍເນບັດນັ້ນເບິ່ງຄືວ່າເປັນສິ່ງເລັກນ້ອຍສຳລັບພຣະອົງ
ພະອົງຈຶ່ງໄດ້ຮັບເຢເຊເບນພະຣາຊທິດາຂອງເອັນບາອັດກະສັດຂອງຊາວໄຊດອນມາເປັນເມຍ ແລະພະອົງໄດ້ນະມັດສະການ ພະບາອານ
ແລະກົ້ມກາບພະນັ້ນ[32]ພະອົງໄດ້ຕັ້ງແທ່ນບູຊາ

 generated on Tue Jun 17 19:01:42 2025

ພະບາອານໃນນິເວດພະບາອານຊຶ່ງພະອົງໄດ້ສ້າງໄວ້ໃນກຸງຊາມາເຣຍ
33 ອາຮາມຕັ້ງເສົາພະອາເຊຣາ
ອາຮາມໄດ້ເຮັດສິ່ງທີ່ພຣະຢາເວພິໂຣດຫລາຍກວ່າກະສັດແຫ່ງອິດສະຣາເອງທຸກພະອົງຊຶ່ງຢູ່ກ່ອນພະອົງ
34 ລະຫວ່າງການປົກຄອງຂອງອາຮາມ ຮີເອນຊາວເບັດເອນໄດ້ສ້າງເມືອງເຢຣິໂກຂຶ້ນ
ຮີເອນໄດ້ວາງຮາກຖານເມືອງນັ້ນໂດຍຕ້ອງເສຍອາບີຣາມພະຣາຊໂອຣົດຫົວປີຂອງທ່ານ ແລະຕັ້ງປະຕູເມືອງໂດຍຕ້ອງເສຍເຊກຸບລູກຊາຍຫລ້າ
ຕາມພະວັດຈະນະຂອງພຣະຢາເວ ຊຶ່ງຕັດທາງໂຍຊູວາລູກຊາຍຂອງນູນ


generated on Tue Jun 17 19:01:42 2025

17 [1]ເອລີຢາ ຊາວທີບີເຫ່ງເມືອງທິບີຂະບີໃນກີເລອາດໄດ້ບອກອາຫັບວ່າ “ ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນ ຜູ້ຊຶ່ງຂ້າພະອົງໄດ້
ຊົງພະຊົນຢູ່ບ່ອນໃດຈະມີນ້ຳຄ້າງຫລືຝົນໃນປີເຫລົ່ານີ້ ນອກຈະທ່ານຈະຂໍຂ້ານ້ອຍ

[2]ວັດຈະນະຂອງພະຢາເວມາຍັງເອລີຢາວ່າ“[3]ຈົ່ງອອກຈາກທີ່ນີ້ໄປທາງທິດຕາເວັນອອກ ລີ້ຢູ່ທາງຕາເວັນອອກແມ່ນ້ຳຈໍແດນ[4]ສິ່ງນີ້ຈະເກີ
ດຂຶ້ນເມື່ອເຈົ້າຈະດື່ມນ້ຳຈາກລຳທານ ແລະເຮົາໄດ້ສັ່ງຝູງກາໄຫ້ລຽງເຈົ້າຢູ່ທີ່ນັ້ນ“
[5]ດັ່ງນັ້ນເອລີຢາຈຶ່ງໄດ້ໄປແລະເຮັດຕາມວັດຈະນະຂອງພຣະຢາເວ ທີ່ໄດ້ຊົງບັນຊາເຂົາໄດ້ອາໄສຢູ່ຂ້າງລຳທານເກຣິດ
ຊຶ່ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຢໍແດນ[6]ຝູງກາກໍໄດ້ນຳຂະຫນົມປັງແລະເນື້ອມາໃຫ້ເຂົາໃນຕອນເຊົ້າ
ແລະນຳອາຫານມາໃຫ້ໃນເວລາຕອນແລງ ແລະເຂົາໄດ້ດື່ມນ້ຳຈາກລຳທານ[7]ແຕ່ຕໍ່ມາອີກບໍ່ດົນທຳທານກໍແຫ້ງ ເພາະບໍ່ ມີຝົນໃນແຜ່ນດິນ
[8]ພຣະວັດຈະນະຂອງພຣະຢາເວມາເຖິງເອລີຢາວ່າ “[9]ຈົ່ງລຸກຂຶ້ນໄປຍັງເມືອງຊາເຣຟັດຊຶ່ງຂຶ້ນກັບເມືອງຊີໂດນ ແລະອາໄສຢູ່ທີ່ນັ້ນເບິ່ງສາ
ເຮົາໄດ້ສັ່ງແມ່ມ້າຍຄົນຫນຶ່ງທີ່ນັ້ນໃຫ້ລ້ຽງດູເຈົ້າ“ດັ່ງນັ້ນ[10]ເຂົາຈຶ່ງໄດ້ລຸກຂຶ້ນໄປຍັງເມືອງສາເຣຟັດ ແລະເມື່ອເຂົາມາເຖິງປະຕູເມືອງ
ຊຶ່ງແມ່ມ້າຍຄົນຫນຶ່ງທີ່ນັ້ນກຳລັງເກັບຟືນດັ່ງນັ້ນເຂົາຈຶ່ງໄດ້ເອີ້ນນາງແລະເວົ້າວ່າ“ຂໍນ້ຳກິນຈັກຫນ່ອຍແດ່ເພື່ອຂ້ານ້ອຍຈະໄດ້ກິນ
[11]ໃນຂະນະທີ່ນາງຈະໄປເອົານ້ຳ ເຂົາກໍໄດ້ເອີ້ນນາງແລະບອກວ່າ“
ຂໍຂະຫນົມປັງນຳເຈົ້າມາໃຫ້ຈັກອັນສາ“[12]ນາງໄດ້ຕອບວ່າພຣະຢາເວພຣະເຈົ້າຂອງທ່ານໄດ້ພະຊົນຢູ່ບ່ອນໃດຂ້ອຍບໍ່ມີຂະຫນົມປັງເລີຍ
ມີແຕ່ແປ້ງກຳມືຫນຶ່ງໃນຫມໍ້ ແລະນ້ຳມັນເລັກນ້ອຍໃນໄຫເບິ່ງສາ
ຂ້ອຍກຳລັວເກັບຟືນສອງອັນເພື່ອຂ້ອຍຈະເຂົ້າໄປເຮັດຂະຫນົມສຳລັບໂຕເອງແລະລູກຊາຍ
ເພື່ອພວກເຂົາຈະກິນແລ້ວກໍຕາຍຢູ່ທີ່ນັ້ນ“[13]ແຕ່ເອລີຢາໄດ້ບອກນາງວ່າ“ ຢ່າຢ້ານເລີຍ
ຈົ່ງໄປເຮັດຕາມທີ່ເຈົ້າເວົ້າແຕ່ຈົ່ງເຮັດຂະຫນົມກ້ອນນ້ອຍໃຫ້ຂ້ອຍກ່ອນແລ້ວເອົາມາໄຫ້ຂ້ອຍກ່ອນ ແລ້ວພາຍຫລັງຈຶ່ງເຮັດສຳຫລັບເຈົ້າ
ແລະລູກຊາຍຂອງເຈົ້າ
[14]ເພາະພຣະຢາເວເຈົ້າຂອງອິດສະຣາເອນໄດ້ກ່າວດັ່ງນີ້ວ່າ ອາຫານໃນຫມໍ້ນັ້ນຈະບໍ່ຂາດ
ແລະນ້ຳໃນໄຫນັ້ນຈະໄຫລບໍ່ຫມົດຈົນກວ່າພຣະຢາເວຈະສົ່ງຝົນລົງມາພື້ນດິນ“[15]ດັ່ງນັ້ນນາງກໍໄປເຮັດຕາມຄຳຂອງເອຣີຢາທີ່ໄດ້ບອກນາງ
ນາງແລະເອລີຢາພ້ອມດ້ວຍຄອບຄົວກໍໄດ້ກິນອາຫານຢູ່ຫລາຍວັນ[16]ອາຫານໃນຫມໍ້ກໍບໍ່ຂາດນ້ຳໃນໄຫກໍໄຫລບໍ່ຢຸດ
ຕາມພຣະວັດຈະນະຂອງພຣະຢາເວໄດ້ກ່າວທາງເອລີຢາ
[17]ພາຍຫລັງຈາກເຫດການເຫລົ່ານີ້ ລູກຊາຍຂອງຍິງນັ້ນເປັນເຈົ້າຂອງບ້ານກໍໄດ້ລົ້ມປ່ວຍ ອາການປ່ວຍຂອງເຂົານັ້ນຫນັກຫລາຍ
ຈົນບໍ່ມີລົມຫາຍໃຈເຫລືອຢູ່ແລ້ວ[18]ດັ່ງນັ້ນ ນາງຈຶ່ງໄດ້ກ່າວແກ່ເອລີຢາວ່າ“ ໂອຄົນຂອງພຣະເຈົ້າ ຂ້ອຍເຮັດຫຍັງໃຫ້ທ່ານ? ທ່ານຈຶ່ງມາຫາຂ້ອຍ
ແລະເພື່ອຂ້າລູກຊາຍຂ້ອຍແນວນີ້ຫວາ?
[19]ແລ້ວເອລີຢາໄດ້ເວົ້າກັບນາງວ່າ“ເອົາລູກຊາຍມາໃຫ້ຂ້ານ້ອຍເຖີດ“ເຂົາກໍໄດ້ນຳເດັກຊາຍໄປຈາກແຂນຂອງນາງແລະອຸ້ມໄປຫ້ອງຊັ້ນເທິງທີ່ທ່ານພັກຢູ່
ແລະເຂົາວາງເດັກນ້ອຍນັ້ນຢູ່ບ່ອນນອນຂອງເຂົາເອງ[20]ເຂົາໄດ້ທູນພຣະຢາເວວ່າ“
ຂ້າແຕ່ພຣະຢາເວພຣະເຈົ້າຂອງຂ້າພະອົງພຣະອົງໄດ້ນຳເຫດຮ້າຍມາເຫນືອຍິງມ້າຍທີ່ຂ້າພະອົງອາໄສຢູ່ນັ້ນບາດດຽວບໍ?
ໂດຍໄດ້ປະຫານລູກຊາຍຂອງນາງ? “[21]ແລ້ວເອລີຢາກໍໄດ້ຢຽດໂຕທັບເດັ່ນນັ້ນສາມເທື່ອ
ເຂົາໄດ້ຮ້ອງທູນພຣະຢາເວວ່າ“ຂ້າແຕ່ພຣະຢາເວພຣະເຈົ້າຂອງຂ້າພະອົງ ຂ້າພະອົງຂໍເດັກນ້ອນນີ້ມາເຂົາໃນຕົວເຂົາອີກດ້ວຍເຖີດ“
[22]ພຣະຢາເວໄດ້ຊົງຟັງສຽງຂອງເອລີຢາ ຊີວິດຂອງເດັກນ້ອຍນັ້ນກໍໄດ້ເຂົ້າມາໃນຕົວຂອງເຂົາອີກ[23]ເອລີຢາໄດ້ອຸ້ມເດັກນັ້ນ
ແລະໄດ້ນຳເຂົາມາຈາກຫ້ອງຊັ້ນເທິງເຂົາໄປໃນບ້ານ ເຂົາໄດ້ມອບເດັກນ້ອຍນັ້ນໃຫ້ແມ່ຂອງເຂົາແລະເວົ້າວ່າ“ ເບິ່ງແມ້
ລູກຊາຍຂອງເຈົ້າມີຊີວິດຢູ່“[24]ຍິງນັ້ນໄດ້ເວົ້າກັບເອລີຢາວ່າ“ ຕອນນີ້ຂ້ອຍຮູ້ແລ້ວວ່າທ່ານເປັນຄົນຂອງພຣະເຈົ້າ
ແລະພຣະວັດຈະນະຂອງພຣະຢາເວອອກຈາກປາກທ່ານເປັນຄວາມຈິງ“

 generated on Tue Jun 17 19:01:42 2025

18 [1]ຫລັງຈາກນັ້ນເປັນເວລາຫລາຍວັນ ພຣະດໍາລັດຂອງພຣະຢາເວໄດ້ມາເຖິງເອລີຢາໃນປີທີສາມທີຝົນບໍ່ຕົກວ່າ“
ຈົ່ງໄປສະແດງໂຕຂອງເຈົ້າຕໍ່ຫນ້າອາຫັບ ແລະເຮົາຈະສົ່ງຝົນຕົກລົງມາຈາກແຜ່ນດິນໂລກ“[2]ເອລີຢາຈຶ່ງໄປສະແດງຕົວຂອງເຂົາຕໍ່ອາຫັບ
ບັດນີ້ການກັນດານອາຫານໃນສະມາເຣຍຮຸນແຮງຫລາຍ

[3]ອາຫັບໄດ້ຊົງຮັບສັ່ງໃຫ້ໂອບາດີຫົວຫນ້າຜູ້ດູແລວັງມາເຫັນ ບັດນີ້
ໂອບາດີໄດ້ຖວາຍກຽດພຣະຢາເວຫລາຍ[4]ເພາະເມື່ອຄັ້ງເຢເຊເບນໄດ້ຂ້າຜູ້ເຜີຍພຣະວັດຈະນະຂອງພຣະເຈົ້າ
ໂອບາດີໄດ້ຊ່ວຍເຫລືອພວກຜູ້ເຜີຍພຣະວັດຈະນະຫນຶ່ງຮ້ອຍຄົນແລະໄດ້ລີ້ເຂົາໃນຖ້ຳສອງແຫ່ງ
ແຫ່ງລະຫ້າສິບຄົນແລະຈັດສົ່ງອາຫານກັບນ້ຳໃຫ້
[5]ອາຫັບໄດ້ກ່າວກັບໂອບາດີຢາວ່າ “ຈົ່ງໄປຍັງຕານ້ຳແລະລໍາທານທຸກແຫ່ງທົ່ວແຜ່ນດິນບາງທີເຮົາອາດຈະພົບຫຍ້າແລະພໍລ້ຽງຊີວິດມ້າແລະລໍ
ເພື່ອວ່າເຮົາຈະໄດ້ບໍ່ສູນເສຍສັດທັງຫມົດ“[6]ດັ່ງນັ້ນພວກເຂົາຈຶ່ງໄດ້ແບ່ງພື້ນທີ່ກັນເພື່ອຈະໄດ້ຄົ້ນຫາທົ່ວເຖິງ ແລະຄົ້ນຫານ້ຳ
ອາຫັບໄດ້ສະເດັດໄປທາງຫນຶ່ງດ້ວຍໂຕຂອງລາວເອງແລະໂອບາດີໄດ້ໄປອີກທາງຫນຶ່ງ
[7]ຂະນະທີ່ບາດີໄດ້ຍ່າງໄປຕາມທາງ ເອລີຢາກໍ່ບັງເອີນໄດ້ມາພົບເຂົາ ໂອບາດີກໍ່ຈື່ເອລີຢາໄດ້ ແລະໄດ້ກົ້ມຄໍານັບລົງພື້ນ ເຂົາໄດ້ກ່າວວ່າ
“ນີ້ແມ່ນເອລີຢານາຍຂອງຂ້ານ້ອຍແທ້ໆບໍ?[8]ເອລີຢາຕອບວ່າ“ ຂ້ອຍເອງ ໄປເວົ້າກັບກະສັດເຖີດວ່າ ອເອລີຢາຢູ່ທີ່ນີ້““
[9]ໂອບາດີໄດ້ຖາມວ່າ“ ຂ້ານ້ອຍໄດ້ເຮັດບາບຫຍັງບໍ ທ່ານຈຶ່ງຈະໃຫ້ຜູ້ຮັບໃຊ້ຂອງທ່ານເຂົາໄປໃນມືຂອງອາຫັບ ເພື່ອໃຫ້ພະອົງປະຫານເຈົ້າ?
[10]ພຣະຢາເວພຣະເຈົ້າຂອງທ່ານໄດ້ພະຊົນຢູ່ແນ່ສັນໃດ ກໍ່ບໍ່ມີອານາຈັກໃດທີ່ນາຍຂອງຂ້ານ້ອຍບໍ່ໄດ້ສົ່ງຄົນໄປຄົ້ນຫາໂຕທ່ານ ສັນນັ້ນ“
ແລະເມື່ອໃດກໍ່ຕາມທີ່ອານາຈັກໃດບອກວ່າ “ເອລີຢາບໍ່ໄດ້ຢູ່ທີ່ນັ້ນ“
ອາຫັບກໍ່ຈະຊົງໃຫ້ພວກດເຂົາສາບານວ່າພວກເຂົາຈະບໍ່ພົບທ່ານ[11]ມາຕອນນີ້ທ່ານບອກໃຫ້“ ໄປທູນເຈົ້ານາຍວ່າເອລີຢາຢູ່ທີ່ນີ້
[12]ແຕ່ເມື່ອຂ້ານ້ອຍໄປແລ້ວ ພະວິນຍານຂອງພຣະຢາເວຈະມາຮັບໂຕທ່ານໄປທີ່ໃດຂ້ານ້ອຍບໍ່ໄດ້ຮູ້
ແລະເມື່ອຂ້ານ້ອຍໄປແລະທູນອາຮາບກັບມາບໍ່ພົບທ່ານພະອົງຈະປະຫານຂ້ານ້ອຍ
ທັ້ງໆທີ່ຜູ້ຮັບໃຊ້ຂອງທ່ານໄດ້ນະມັດສະການພຣະຢາເວມາຕັ້ງແຕ່ຂ້ານ້ອຍຍັງຫນຸ່ມໆນາຍຂອງຂ້ານ້ອຍ[13]ບໍ່ມີໃຜບອກທ່ານບໍ່ວ່າ
ຂ້ານ້ອຍໄດ້ເຮັດຫຍັງເມື່ອຄັ້ງເຢເຊເບນຂ້າຜູ້ເຜີຍພຣະວັດຈະນະຂອງພຣະຢາເວນັ້ນ
ຂ້ານ້ອຍເຊື່ອງໂຕຜູ້ເຜີຍພຣະວັດຈະນະຂອງພຣະເຈົ້າຮ້ອຍຄົນໃນຖ້ຳໂດຍແບ່ງຫ້າສິບຄົນໃນຖ້ຳ ແລະຈັດສົ່ງອາຫານກັບນ້ຳໃຫ້ແນວໃດ?
[14]ຕອນນີ້ ທ່ານບອກຂ້ານ້ອຍໃຫ້ເວົ້າວ່າໄປ ແລະບອກນາຍຂອງເຈົ້າວ່າເອລີຢາຢູ່ທີ່ນັ້ນ
ດັ່ງນັ້ນພຣະອົງໄດ້ປະຫານຊີວິດຂ້ານ້ອຍ“[15]ແລ້ວເອລີຢາໄດ້ກ່າວວ່າ
“ພຣະຢາເວຈອມໂຍທາທີ່ຂ້າພະເຈົ້າເຄີຍຢືນຫຍັດເພື່ອພຣະອົງພຣະຊົນຢູ່ແນ່ສັນໃດ
ຂ້ານ້ອຍກໍ່ຈະສະແດງຕົວຕໍ່ອາຫັບໃນວັນນີ້ຢ່າງແນ່ນອນສັນນັ້ນ
[16]ດັ່ງນັ້ນ ໂອບາດີຈຶ່ງໄດ້ໄປເຂົ້າເຝົ້າອາຫັບແລະກາບທູນພະອົງໃນສິ່ງທີ່ເອລີຢາໄດ້ເວົ້າ
ແລ້ວກະສັດກໍ່ໄດ້ສະເດັດອອກມາພົບເອລີຢາ[17]ເມື່ອອາຮັບໄດ້ເຫັນເອລີຢາ ພະອົງໄດ້ກ່າວວ່າ “ນີ້ເຈົ້າບໍ?
ເຈົ້າຄືຄົນທີ່ນໍາຄວາມເດືອດຮ້ອນມາສູ່ອິດສະຣາເອນ“
[18]ເອລີຢາໄດ້ຕອບວ່າ“ ຂ້າພະອົງບໍ່ໄດ້ນໍາຄວາມເດືອດຮ້ອນມາສູ່ອິດສະຣາເອນ
ແຕ່ພະອົງແລະຣາຊວົງຂອງພໍ່ພະອົງຕ່າງຫາກທີ່ໄດ້ນໍາຄວາມເດືອດຮ້ອນມາ
ໂດຍພະອົງໄດ້ຖິ້ມພຣະບັນຍັດຂອງພຣະຢາເວແລະໂດຍການຕິດຕາມບາອານ[19]ບັດນີ້ ຈົ່ງສົ່ງຂ່າວໄປແລະລວມອິດສະຣາເອນທັງຫມົດມາພົບ
ຂ້ານ້ອຍເທິງພູເຂົາກາເມນພ້ອມທັງຜູ້ທໍານາຍຂອງພະບາອານ 450 ຄົນ ແລະຜູ້ເຜີຍວັດຈະນະຂອງແມ່ອາເຊຣາສີ່ຮ້ອຍຄົນ
ຊຶ່ງເຢເຊເບນເຄີຍລວມໂຕະອາຫານນໍາ
[20]ດັ່ງນັ້ນອາຮາມຈຶ່ງໄດ້ສົ່ງຂ່າວໄປຍັງປະຊາຊົນທັງຫມົດຂອງອິດສະຣາເອນ ແລະ
ເອີ້ນບັນດາຜູ້ເຜີຍວັດຈະນະມາຊຸມນຸມເທິງພູເຂົາກາເມນ[21]ເອລີຢາໄດ້ເຂົ້າມາໃກ້ປະຊາຊົນທັງຫມົດແລະໄດ້ກ່າວວ່າ“ພວກທ່ານຈະປ່ຽນໃຈໄປມາດົນອີກປານໃດ?
ຫາກພຣະຢາເວຊົງເປັນພຣະເຈົ້າ ຈົ່ງຕິດຕາມພຣະອົງ ແຕ່ຫາກພະບາອານເປັນພະເຈົ້າກໍ່ຕິດຕາມເຂົາໄປເຖີດ“
ແຕ່ປະຊາຊົນບໍ່ໄດ້ຕອບຫຍັງກັບທ່ານຈັກຄໍາດຽວ
[22]ແລ້ວເອລີຢາຈຶ່ງໄດ້ກ່າວກັບປະຊາຊົນວ່າ “ເຮົາ ເຮົາເປັນພຽງຄົນດຽວເປັນຜູ່ເຜີຍພຣະວັດຈະນະຂອງພຣະຢາເວທີ່ເຫລືອຢູ່
ແຕ່ຝ່າຍພະບາອານມີຜູ້ພະຍາກອນເຖິງ 450 ຄົນ[23]ດັ່ງນັ້ນ ພວກທ່ານຈົ່ງນໍາງົວຜູ້ສອງໂຕ ໃຫ້ຄົນຂອງພະບາອານເລືອກເອົາໂຕຫນຶ່ງ
ແລະສັບເປັນຕ່ອນວາງໄວ້ຢູ່ກອງຟືນ ແຕ່ບໍ່ຕ້ອງຈູດໄຟ ແລ້ວຂ້ານ້ອຍຈະຕຽມງົວຜູ້ອີກໂຕຫນຶ່ງ
ແລະນໍາມາໄວ້ກອງຟືນໂດຍບໍ່ຈູດໄຟດ້ວຍເຊັ່ນກັນ[24]ຈາກນັ້ນພວກທ່ານຈົ່ງຮ້ອງອອກມາຈາກພະນາມພວກທ່ານ
ເຮົາຈະຮ້ອງອອກມາພຣະນາມພຣະຢາເວ ແລະພຣະເຈົ້າອົງທີ່ຕອບຈະສົ່ງໄຟລົງມານັ້ນແລະແມ່ນພຣະເຈົ້າອົງທ່ຽງແທ້“
ແລະປະຊາຊົນທັງປວງໄດ້ຕອບແລ້ວກ່າວວ່າ “ນີ້ເຂົ້າທ່າດີ“
[25]ດັ່ງນັ້ນ ເອລີຢາໄດ້ເວົ້າກັບ ຜູ້ພະຍາກອນພະບາອານວ່າ
“ຈົ່ງເລືອກງົວຜູ້ໄປໂຕຫນຶ່ງສໍາລັບພວກທ່ານແລະຈັດຕຽມກ່ອນເຖີດເພາະຫາກພວກທ່ານມີກັນຫລາຍຄົນແລ້ວຈົ່ງຮ້ອງພະນາມຂອງພວກທ່ານແຕ່ຢ່າຈູດໄຟຂ້າງງ
ແລ້ວພວກເຂົາກໍ່ໄດ້ຮຍກຮ້ອງພະນາມຂອງພະບາອານຕັ້ງແຕ່ເຊົ້າຈົນທ່ຽງ ຮ້ອງດັ່ງໆວ່າ ຂ້າແຕ່ພະບາອານ ໂປດຈູດໄຟໃຫ້ຂ້າພະອົງເຖີດ“
ແຕ່ບໍ່ໄດ້ມີສຽງຫລືໃຜຕອບອອກມາເລີຍ ພວກເຂົາກໍ່ໄດ້ເອີ້ນໄປອ້ອມໆ ແທ່ນທີ່ພວກເຂົາໄດ້ສ້າງຂຶ້ນ
[27]ຕອນທ່ຽງເອລີຢາໄດ້ເລີ່ມເຢາະເຢີ້ຍພວກເຂົາວ່າ “ຮ້ອງດັ່ງຂຶ້ນອີກແດ່ ພະບາອານແມ່ນພະເຈົ້າເດະ ບາງທີພະອົງອາດຈະກໍາລັງໃຈລອຍຫລື
ປົດທຸກຢູ່ຫລືກໍາລັງເດີນທາງ ບາງເທື່ອພະອົງກະລັງຫລັບຢູ່
ຕ້ອງຊ່ວຍກັນປຸກໃຫ້ຕື່ນ“[28]ສະນັ້ນເຂົາຈຶ່ງຊ່ວຍກັນຮ້ອງແຮງຂຶ້ນແລະພວກເຂົາໄດ້ເອົາດາບແລະຫອກມາປາດເລືອດໂຕເອງຕາມພິທີກໍາເຂົາເລືອດໄຫລເຕັມໂຕພວກ
ແລະພວກເຂົາໄດ້ເຮັດສິ່ງບ້າຄັ້ງຕໍ່ໄປຈົນຮອດເວລາຖວາຍເຄື່ອງບູຊາຕອນແລງ ແຕ່ບໍ່ມີຫຍັງຕອບຮັບ ບໍ່ມີໃຜສົນໃຈຄໍາຮ້ອງຂໍຂອງພວກເຂົາ

[30]ແລ້ວເອລີຢາໄດ້ກ່າວແກ່ປະຊາຊົນນັ້ນວ່າ “ມາໃກ້ໆເຮົາ“ ແລະພວກເຂົາທັງຫມົດກໍມາໃກ້ເຂົາ
ແລ້ວເອລີຢາກໍໄດ້ແປງແທ່ນບູຊາຂອງພຣະຢາເວຊຶ່ງຢູ່ໃນສະພາບຜຸພັງ[31]ເອລີຢາໄດ້ນໍາຫີນມາສິບສອງກ້ອນ
ຫນຶ່ງກ້ອນແທ່ນຫນຶ່ງເຜົ່າຂອງບັນດາເຜົ່າບັນດາລູກຊາຍຢາໂຄບຜູ້ຊຶ່ງພຣະຢາເວໄດ້ກ່າວວ່າ
“ອິດສະຣາເອຈະເປັນນາມຂອງເຈົ້າ“[32]ດ້ວຍຫີນເຫລົ່ານີ້ ເຂົາໄດ້ໃຊ້ໃນການສ້າງແທ່ນບູຊາໃນພຣະນາມພຣະຢາເວ
ແລ້ະເຂົາໄດ້ຂຸດຮ່ອງຮອບແທ່ນບູຊາຂະຫນາດໃຫຍ່ພໍທີ່ຈະໃສ່ເມັດພືດໄດ້ເກືອບສິບສີ່ລິດ
[33]ເຂົາໄດ້ລຽງໄມ້ຟືນທີ່ປອດໄພສັບງົວຜູ້ເປັນຕ່ອນໆ ວາງຕ່ອນຕ່າງໆ ຂອງງົວຜູ້ໃສ່ກອງຟືນ ເຂົາໄດ້ເວົ້າວ່າ
“ຈົ່ງຕັກນໍ້າໃສ່ໃຫ້ເຕັມຖັງແລະເທລົງເຄື່ອງເຜົາບູຊາແລະເທິງກອງຟືນ[34]ແລ້ວເຂົາກໍໄດກ່າວວ່າ“ຈົ່ງເຮັດອີກເປັນຄັ້ງທີສອງ ເຮັດອີກຄັ້ງຫນຶ່ງ
ເຂົາໄດ້ເວົ້າວ່າຈົ່ງເຮັດອີກເປັນຄັ້ງທີສາມ[35]ນໍ້າໄຫລອ້ອມແທນບູຊາແລະໄດ້ເຕັມຮ່ອງທີ່ຂຸດໄວ້
[36]ເຫດການນີ້ໄດ້ເກີດຂຶ້ນໃນຕອນແລງເວລາຖວາຍເຄື່ອງບູຊາ ຜູ້ເຜີຍວັດຈະນະເອລີຢາໄດ້ເດີນທາງມາໃກ້ແລະກ່າວວ່າ
“ຂ້າແດ່ພຣະຢາເວພຣະເຈົ້າຂອງອັບຣາຮາມອິດສະອັດແລະອິດສະຣາເອນ
ຂໍໃຫ້ເປັນທີ່ພຽງທົ່ວກັນໃນວັນນີ້ວ່າພຣະອົງໄດ້ເປັນພຣະເຈົ້າແຫ່ງອິດສະຣາເອນ ແລະຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ
ແລະຂ້ານ້ອຍເຮັດທັງຫມົດນີ້ແມ່ນເຮັດຕາມພຣະບັນຊາຂອງພຣະອົງ[37]ຂໍພຣະອົງຕອບຂ້ານ້ອຍເພື່ອປະຊາຊົນເຫລົ່ານີ້ຈະໄດ້ຮູ້ວ່າຄືພຣະອົງ
ພຣະຢາເວໄດ້ຊົງນໍາຈິດໃຈຂອງເຂົາກັບມາຫາພຣະອົງເອງອີກຄັ້ງ“
[38]ທັນໃດນັ້ນເອງໄຟຂອງພຣະຢາເວກໍຕົກລົງມາແລະໄດ້ເຜົາໄຫມ້ເຄື່ອງບູຊາຂະນະທີ່ໄມ້ຟືນ
ຫີນແລະພື້ນດິນບ່ອນນັ້ນແລະແມ້ແຕ່ນໍ້າທີ່ຢູ່ອ້ອມຮອບແທ່ນນັ້ນກໍແຫ້ງໄປຫມົດ[39]ເມື່ອປະຊາຊົນໄດ້ເຫັນດັ່ງນັ້ນພວກເຂົາກໍໄດ້ກົ້ມຫນ້າລົງພື້ນດິນແລະຮ້ອງວ່າ
“ພຣະຢາເວ ພຣະອົງຊົງເປັນພຣະເຈົ້າ[40]ດັ່ງນັ້ນເອລີຢາໄດ້ເວົ້າກັບພວກເຂົາວ່າ“ຈົ່ງຈັບກຸມໂຕບັນດາຄົນຂອງພະບາອານໄວ້
ຢ່າໃຫ້ເຂົາຫນີລອດໄປໄດ້ແມ້ແຕ່ຄົນດຽວ“ດັ່ງນັ້ນພວກເຂົາກໍຈັບກຸມ
ແລະເອລີຢາໄດ້ນໍາໂຕບັນດາຜູ້ຄົນເຄົາລົບພະບາອານທີ່ລົງໄປໃນຫ້ວຍກີໂຊນແລະຂ້າພວກເຂົາເສຍ
[41]ເອລີຢາໄດ້ກ່າວກັບອາຮາມວ່າ “ຂໍຈົ່ງລຸກຂຶ້ນເຊີນກິນແລະດື່ມເຖີດເພາະມີຝົນຮ່າໃຫຍ່[42]ດັ່ງນັ້ນ ອາຮາມຈຶ່ງໄດ້ໄປກິນແລະດື່ມ
ແລ້ວເອລີຢາໄດ້ຂຶ້ນໄປຍອດພູກາເມນ ແລ້ວເຂົາໄດ້ກົ້ມໂຕລົງຮອດພື້ນດິນແລະກົ້ມຫນ້າຂອງເຂົາລົງລະຫວ່າງເຂົ່າຂອງເຂົາ
[43]ເຂົາໄດ້ສັ່ງຄົນຮັບໃຊ້ຂອງເຂົາວ່າ “ຈົ່ງໄປແລະເບິ່ງທະເລ“ ຄົນຮັບໃຊ້ຂອງເຂົາໄດ້ຂຶ້ນໄປ ແລະເບິ່ງ ແລ້ວໄດ້ເວົ້າວ່າ“ບໍ່ມີຫຍັງເລີຍ“
ກັບໄປເບິ່ງອີກເຈັດເທື່ອ“[44]ໃນຄັ້ງທີເຈັດຄົນຮັບໃຊ້ໄດ້ເວົ້າວ່າ“ ເບິ່ງສາ ມີເມກນ້ອຍໆກ້ອນຊໍາຝາມືຫນຶ່ງຂຶ້ນມາຈາກທະເລ“ ເອລີຢາຈຶ່ງໄດ້ກ່າວວ່າ
“ຈົ່ງໄປທູນຕໍ່ອາຮາມວ່າ ຈົ່ງຕຽມລົດມ້າເສິກຂອງພຣະອົງແລ້ວຈົ່ງລົງຈາກພູເຂົາ ກ່ອນພະອົງຈະຊົງຕິດຝົນ“
[45]ສິ່ງນີ້ໄດ້ເກີດໃນບໍ່ຊ້າທ້ອງຟ້າກໍມືດດ້ວຍເມກອັນຫນາຕຶບກໍປົກຄຸມຟ້າສະຫວັນ ລົມເລີ່ມພັດມາ ແລະຝົນຫ່າໃຫຍ່ກໍເລີ່ມຕົກ
ອາຮາມໄດ້ຟ້າວໄປຢິດຊະເຣນ[46]ແຕ່ພຣະຫັດຂອງພຣະຢາເວໄດ້ລົງມາເຂົາໄດ້ເອົາເສື້ອມັດແອວໃຫ້ແຫນ້ນແລະແລ່ນແຊງກັນຂຶ້ນຫນ້າກະສັດມາຈົນຮອດທາງເຂົ້

# 19 [1]ອາຮາບ ເລົ່າເລື່ອງທັງຫມົດທີ່ເອລີຢາໄດ້ເຮັດ

ແລະການທີ່ເອລີຢາໄດ້ປະຫານຜູ້ພະຍາກອນຂອງພະບາອານທັງຫມົດດ້ວຍດາບ[2]ຈາກນັ້ນນາງເຢເຊເບນຈຶ່ງໄດ່ສົ່ງຄົນມາແຈ້ງເອລີຢາວ່າ
“ຂໍໃຫ້ພະທັງຫລາຍເຮັດກັບເຮົາແລະຫລາຍກວ່ານັ້ນຫາກພາຍໃນມື້ອື່ນນີ້ເວລາດຽວກັນນີ້
ເຮົາຍັງບໍ່ປິດຊີວິດເຈົ້າເຫມືອນຜູ້ທີ່ປິດຊີວິດຄົນເຫລົ່ານັ້ນ“[3]ເມື່ອເອລີຢາໄດ້ຍິນສຽງດັ່ງນັ້ນ ເຂົາກໍໄດ້ລຸກຂຶ້ນແລະຫນີເອົາຊີວິດລອດ
ໄປຍັງເບເອເຊບາຊຶ່ງເປັນຂອງອານາຈັກຢູດາ ແລະຖິ້ມຄົນຮັບໃຊ້ໄວ້ທີ່ນັ້ນ

[4]ສ່ວນເຂົາເອງກໍເດີນທາງເຂົ້າໄປໃນຖິ່ນທຸລະກັນດານແຕ່ຄົນດຽວ ຫມົດມື້ແລ້ວເຂົາຈຶ່ງໄດ້ມາແລະນັ່ງລົງກ້ອງຕົ້ນໄມ້ຕົ້ນຫນຶ່ງ
ເຂົາໄດ້ອະທິຖານໃຫ້ໂຕເອງຕາຍແລະກ່າວວ່າ ຂ້າແຕ່ພຣະຢາເວຂ້າພຣະອົງທົນມາດົນແລ້ວ ຂໍໄດ້ຊົງເອົາຊີວິດຂ້ານ້ອຍໄປເຖີດ
ຂ້ານ້ອຍກໍບໍ່ດີກວ່າບັນພະບູລຸດຂອງຂ້ານ້ອຍທີ່ໄດ້ຕາຍໄປແລ້ວ“[5]ສະນັ້ນເຂົາກໍໄດ້ນອນກ້ອງຟຸ່ມໄມ້ແລະຫລັບໄປທັນໃດນັ້ນກໍມີທູດສະຫວັນອົງຫນຶ່ງໄດ້ມາແຕະຕ້ອງ
ຈົ່ງລຸກຂຶ້ນແລະກິນອາຫານ“[6]ເອລີຢາໄດ້ລຸກຂຶ້ນແລະເບິ່ງໄປອ້ອມໆ ແລະມີຂະຫນົມປັງປີ້ງຢູ່ຖານຮ້ອນໆ ແລະມີນ້ຳຈອກຫນຶ່ງຢູ່ໃກ້ຫົວລາວ
ສະນັ້ນເຂົາຈຶ່ງກິນຂະຫນົມປັງ ດື່ມນ້ຳແລ້ວລົ້ມໂຕນອນລົງອີກ
[7]ທູດສະຫວັນຂອງພຣະຢາເວກໍໄດ້ມາອີກຄັ້ງຫນຶ່ງເປັນເທື່ອທີສອງ ໄດ້ແຕະຕົວເຂົາແລະໄດ້ບອກວ່າ
“ຈົ່ງລຸກຂຶ້ນແລະກິນອາຫານເພາະການເດີນທາງຄັ້ງນີ້ເກີນກຳລັງຂອງທ່ານ“[8]ດັ່ງນັ້ນເອລີຢາຈຶ່ງລຸກຂຶ້ນກິນອາຫານແລະກິນນ້ຳ
ແລະເຂົາເດີນທາງຈາກກຳລັງຂອງອາຫານທີ່ລາວກິນນັ້ນເປັນເວລາສີ່ສິບວັນສີ່ສິບຄືນຈົນມາເຖິງພູເຂົາຊີນາຍຂອງພຣະເຈົ້າ
[9]ເຂົາໄດ້ເຂົ້າໄປທີ່ຖ້ຳແຫ່ງຫນຶ່ງແລ້ວທັນໃດນັ້ນພຣະວັດຈະນະຂອງພຣະຢາເວກໍໄດ້ມາເຖິງແລ້ວໄດ້ກ່າວກັບເຂົາວ່າ“ ເອລີຢາເອີຍ
ເຈົ້າເຮັດຫຍັງຢູ່ທີ່ນີ້?[10]ເອລີຢາໄດ້ຕອບວ່າ“ ຂ້ານ້ອຍໄດ້ທຸ້ມເທຢ່າງຫລາຍເພື່ອພຣະຢາເວ ພຣະເຈົ້າຈອມໂຍທາ
ເພາະປະຊາຊົນອິດສະຣາເອນໄດ້ຖິ້ມພັນທະສັນຍາຂອງພຣະອົງ
ໄດ້ທຳລາຍແທ່ນບູຊາຂອງພຣະອົງແລະໄດ້ສັງຫານຜູ້ເຜີຍພຣະວັດຈະນະຂອງພຣະອົງດ້ວຍດາບ ບັດນີ້ ເຫລືອຂ້ານ້ອຍພຽງຄົນດຽວ
ແລະພວກເຂົາພະຍາຍາມເອົາຊີວິດທ່ານດ້ວຍ
[11]ພຣະຢາເວໄດ້ກ່າວວ່າ “ຈົ່ງອອກໄປຢືນຕໍ່ຫນ້າເຮົາເທິງພູເຂົາ“
ແລ້ວເມື່ອພຣະຢາເວໄດ້ສະເດັດຜ່ານໄປກໍມີລົມພາຍຸແຮງພັດປະທະພູເຂົາເຮັດໃຫ້ຫີນແຕກເປັນປ່ຽງ ຕໍ່ພຣະພັກພຣະຢາເວ
ແຕ່ພຣະຢາເວບໍ່ໄດ້ຢູ່ໃນລົມ ແລ້ວຕໍ່ຈາກລົມກໍເກີດແຜ່ນດິນໄຫວນັ້ນ[12]ແລ້ວພາຍຫລັງແຜ່ນດິນໄຫວກໍເກີພດໄຟລຸກ
ແຕ່ພຣະຢາເວບໍ່ໄດ້ຢູ່ໄຟນັ້ນ ຫລັງຈາກໄຟມີສຽງຊື່ມເບົາໆ
[13]ເມື່ອເອລີຢາໄດ້ຍິນສຽງ ເຂົາກໍໄດ້ຍົກເສື້ອຄຸມປິດຫນ້າ ແລະໄດ້ຢືນຢູ່ປາກທາງເຂົ້າຖ້ຳ ແລ້ວໄດ້ຍິນສຽງຫນຶ່ງກ່າວກັບເຂົາວ່າ “ເອລີຢາເອີຍ
ເຈົ້າມາເຮັດຫຍັງຢູ່ນີ້? “[14]ເອລີຢາໄດ້ຕອບວ່າ“
ຂ້ານ້ອຍໄດ້ທຸ້ມເທຢ່າງຫລາຍເພື່ອພຣະເຈົ້າຢາເວພຣະເຈົ້າໂຍທາເພາະປະຊາຊົນອິດສະຣາເອນໄດ້ຖິ້ມພັນທະສັນຍາຂອງພຣະອົງ
ໄດ້ທຳລາຍແທ່ນບູຊາຂອງພຣະອົງ ແລະໄດ້ສນັງຫານຜູ້ເຜີຍພຣະວັດຈະນະຂອງພຣະອົງດ້ວຍຄົມດາບ
ບັດນີ້ເຫລືອຂ້ານ້ອຍພຽງຄົນດຽວແລະພວກເຂົາພະຍາຍາມເອົາຊີວິດຂ້າພະອົງນຳ“
[15]ແລ້ວພຣະຢາເວໄດ້ຕອບເຂົາວ່າ່“ຈົ່ງກັບໄປຕາມທາງທີ່ເຈົ້າມາ ແລ້ວໄປຍັງຖິ່ນທຸລະກັນດານ ດາມັສກັດ ແລະເມື່ອເຈົ້າໄປຮອດທີ່ນັ້ນ
ຈົ່ງເຈີມຮາຊາເອນໄຫ້ເປັນກະສັດເຫນືອອາຣາມ[16]ແລະເຈົ້າຈົ່ງເຈີມເຢບຸດລູກຊານຂອງນິມຊີໃຫ້ເປັນກະສັດເຫນືອອິດສະຣາເອນ
ແລ້ວຈົ່ງເຈີມເອລີຊາລູກຊາຍຊາຟັດຊາວອາເບັນເມໂຮລາໃຫ້ເປັນຜູ້ເຜີຍພຣະວັດຈະນະສືບຕໍ່ຈາກເຈົ້າ
[17]ສິ່ງນີ້ຈະເກີດຂຶ້ນ ຜູ້ໃດຫນີລອດຄົມດາບຮາຊາເອນຈະຖືກຂ້າ
ແລະຜູ້ໃດຫນີຮອດຄົມດາບຂອງເຢຮູຈະຖືກເອລີອາຊາຂ້າ[18]ແຕ່ເຮົາຈະເຫລືອປະຊາຊົນໄວ້ເຈັດພັນຄົນໃນອິດສະຣາເອນ
ຜູ້ຊຶ່ງຫົວເຂົ່າຂອງເຂົາບໍ່ໄດ້ຄຸລົງຂາບໄຫວ້ ແລະປາກຂອງເຂົາບໍ່ໄດ້ຈູບພະບາອານ
[19]ເອລີຢາຈາກໄປຈາກທີ່ນັ້ນແລະພົບເອລີຊາລູກຊາຍຂອງຊາຟັດກຳລັງໄຖນາ ແລະໄດ້ມີງົວສິບສອງຄູ່ຍ່າງອອກກ່ອນລາວ
ແລະຕົວຂອງເຂົາເອງນັ້ນກຳລັງໄຖນາກັບແອກທີສິບສອງ
ເອລີຢາຈຶ່ງໄດ້ຍ່າງເຂົ້າໄປຫາແລະໃສ່ເສື້ອຄຸມໃຫ້ເອລີຊາ[20]ແລ້ວເອລີຊາໄດ້ຖິ້ມງົວນັ້ນໄວ້ແລ້ວແລ່ນໄປຫາເອລີຢາ ແລ້ວເຂົາກ່າວວ່າ“
ຂໍໄຫ້ຂ້ານ້ອຍໄດ້ຈູບລາພໍ່ແລະແມ່ກ່ອນ ແລ້ວຈະຕິດຕາມທ່ານໄປ“ ແລ້ວເອລີຢາໄດ້ຕອບເຂົາວ່າ“ ກັບໄປສາ
ແຕ່ຢາລືມວ່າເຮົາໄດ້ເຮັດຫຍັງແກ່ເຈົ້າ“
[21]ດັ່ງນັ້ນເອລີຊາໄດ້ຫລຽວໄປຈາກເອລີຢາເອົາແອກງົວມາເຮັດເປັນຟືນ ຂ້າສັດ ແລະເອົາຊີ້ນມາດ້ວຍໄມ້ຂອງແອກງົວ
ແລ້ວເຂົາໄດ້ແຈກຈ່າຍຊີ້ນໃຫ້ປະຊາຊົນ ແລະພວກເຂົາກໍໄດ້ກິນອາຫານດັ່ງນັ້ນເອລີຊາໄດ້ລຸກຂຶ້ນຕິດຕາມເອລີຢາໄປແລະໄດ້ຮັບໃຊ້ເອລີຢາ

 generated on Tue Jun 17 19:01:42 2025

# 20

[1]ເບັນຮາດາບກະສັດອາຣາມໄດ້ຊົງລວບລວມກອງທັບທັງຫລາຍຂອງພຣະອົງ ມີກະສັດທີ່ຮອງຈາກພຣະອົງສາມສິບສອງອົງຢູ່ກັບພະອົງ
ພ້ອມກັບມ້າແລະລົດມ້າເສິກ ແລະພະອົງໄດ້ຂຶ້ນໄປອ້ອມເມືອງສະມາເຣຍ
ແລະໄດ້ສູ້ຮົບກັບເມືອງນັ້ນ[2]ພຣະອົງໄດ້ສົ່ງຜູ້ສື່ສານໄປຫາອາຮາມກະສັດແຫ່ງອິດສະຣາເອນ
ແລະໄດ້ກ່າວກັບພະອົງວ່າ[3]ເງິນແລະທອງຂອງພະອົງເປັນຂອງເຮົາບັນດາເມຍແລະໂອຣົດຂອງພະອົງເປັນຂອງເຮົານຳ“

[4]ກະສັດແຫ່ງອິດສະຣາເອນໄດ້ຕອບວ່າ“ຂ້າແຕ່ກະສັດເຈົ້ານາຍຂອງຂ້ານ້ອຍເປັນດັ່ງທີ່ພຣະອົງເວົ້າ
ຂ້ານ້ອຍແລະທຸກຢ່າງທີ່ຂ້ານ້ອຍມີເປັນຂອງພະອົງ“[5]ບັນດາຜູ້ສື່ສານໄດ້ກັບມາອີກຄັ້ງແລະໄດ້ກ່າວວ່າ“
ເບັນຮາດດາດກ່າວດັ່ງນີ້ວ່າເຮົາສົ່ງຂ່າວມາຍັງພະອົງວ່າ ຈົ່ງມອບເງິນແລະທອງຂອງພະອົງ ບັນດາເມຍແລະລູກທັງຫລາຍແກ່ເຮົາ[6]ແຕ່ມື້ອື່ນ
ປະມານນີ້ ເຮົາຈະສົ່ງຄົນຂອງເຮົາໄປຫາພະອົງແລະພວກເຂົາຈະຄົ້ນວັງຂອງພະອົງ
ຄົ້ນບ້ານຂ້າໃຊ້ຂອງພະອົງສິ່ງໃດທີ່ຕ້ອງຕາພວກເຂົາພວກເຂົາຈະຢຶບເອົາໄປ
[7]ແລ້ວກະສັດອິດສະຣາເອນໄດ້ເອີ້ນປະຊຸມຜູ້ອາວຸໂສທັງຫມົດຂອງແຜ່ນດິນ
ກ່າວວ່າ“ຂໍໃຫ້ພິຈາລະນາເບິ່ງວ່າຜູ້ຊາຍນີ້ຫາເລື່ອງເດືອດຮ້ອນຊໍ່າໃດ ເຂົາໃຫ້ຄົນມາເອົາເມຍແລະລູກຂອງເຮົາ ທັງເງິນແລະທອງຂອງເຮົາ
ເຮົາກໍບໍ່ປະຕິເສດເຂົາ“[8]ບັນດາຜູ້ອາວຸໂສແລະປະຊາຊົນທັງຫມົດກໍໄດ້ເວົ້າກັບອາຮາມວ່າ “ຢ່າສູ່ຟັງ ຫລືຍອມເຮັດຕາມຄຳສັ່ງຂອງເຂົາ
[9]ດັ່ງນັ້ນອາຮາມຈຶ່ງໄດ້ສັ່ງແກ່ຜູ້ສື່ສານເບັນຮາດາດວ່າ ຈົ່ງໄປທູນກະສັດເຈົ້ານາຍຂອງເຮົາວ່າ
ເຮົາເຫັນດ້ວຍກັບທຸກສິ່ງທີ່ພະອົງຮຽກຮ້ອງຈາກຜູ້ຮັບໃຊ້ຂອງພະອົງໃນຄັ້ງທຳອິດນັ້ນ ແຕ່ຄຳສັ່ງທີ່ສອງນີ້ເຮົາເຮັດບໍ່ໄດ້““
ດັ່ງນັ້ນຜູ້ສື່ສານກໍຈາກໄປ“ ແລະກັບມາລາຍງານເບັນຮາດາດ[10]ແລ້ວເບັນຮາດາດໄດ້ສົ່ງຄ່າວໄປຍັງອາຮາບວ່າ
“ຂໍໃຫ້ພວກພະທັງຫລາຍລົງໂທດເຮົາແລະເຈັບຫຍິ່ງກວ່າ
ຖ້າຫາກວ່າເຮົາຫລືຜົງຂີ້ເທົ່າແຫ່ງສະມາເຣຍພໍໃຫ້ປະຊາຊົນທັງຫລາຍຕິດຕາມເຮົາກໍໄດ້ຄົນລະຫນຶ່ງກຳມື
[11]ກະສັດອິດສະຣາເອນໄດ້ຕອບວ່າ“ຈົ່ງບອກເບັນຮາດາດວ່າ ບໍ່ມີໃຜທີ່ໃສ່ເກາະອວດອ້າງວ່າເປັນຜູ້ໃສ່ເກາະເລີຍ““[12]ເບັນຮາດາດໄດ້ຮູ້ຂ່າວນີ້
ຂະນະທີ່ພະອົງກະລັງກິນກັບບັນດາກະສັດທີ່ຢູ່ພາຍໃຕ້ພະອົງ ທີ່ໃນເຕັນ
ເບັດຮາດາດກໍໄດ້ຊົງຮັບສັ່ງຄົນຂອງພະອົງວ່າ“ຈົ່ງເຂົ້າປະຈຳທີ່ເພື່ອພ້ອມຮົບ“ສະນັ້ນເຂົາທັງຫລາຍກໍໄດ້ຕຽມໂຕເອງໃຫ້ພ້ອມຮົບເພື່ອເຂົ້າໂຈມຕີເມືອງນັ້ນ
ແລ້ວ
[13]ເບິ່ງສາຜູ້ເຜີຍພະວັດຈະນະຄົນຫນຶ່ງໄດ້ມາຫາອາຮາບກະສັດແຫ່ງອິດສະຣາເອນໄດ້ກ່າວວ່າ “ພຣະຢາເວກ່າວດັ່ງນີ້ວ່າ
ເຈົ້າເຫັນກອງທັບໃຫຍ່ຫວາ? ເບິ່ງແມ່ ເຮົາຈະມອບໄວ້ໃນມືຂອງເຈົ້າໃນວັນນີ້
ແລ້ວເຈົ້າຈະໄດ້ຮູ້ວ່າເຮົາຄືພຣະຢາເວ“[14]ອາຮາມໄດ້ກ່າວ“ໂດຍໃຜ? ພຣະຢາເວໄດ້ກ່າວດັ່ງນີ້ວ່າ“
ໂດຍມືຂອງຂ້າຣາຊການຄົນຫນຸ່ມຜູ້ເຮັດຫນ້າທີ່ເປັນຜູ້ປົກຄອງຫົວເມືອງທັງຫລາຍ“ ແລ້ວອາຮາມໄດ້ກ່າວວ່າ“ ໃຜຈະເລີ່ມຮົບ?
ພຣະຢາເວກ່າວວ່າ ເຈົ້າຫັ້ນແລະ“[15]ແລ້ວອາຮາມຈຶ່ງໄດ້ລວບລວມຂ້າລາຊະການຫນຸ່ມ
ຜູ້ຊຶ່ງເຮັດຫນ້າທີ່ເປັນຜູ້ປົກຄອງຫົວເມືອງທັງຫລາຍເຫລົ່ານັ້ນ ຊຶ່ງມີ232 ຄົນ ພາຍຫລັງພະອົງໄດ້ຊົງລວບລວມຫາທະຫານທັງຫມົດ
ມີເຈັດພັນຄົນ
[16]ເຂົາທັງຫລາຍໄດ້ຍົກອອກໄປໃນເວລາຫມົດມື້ ສ່ວນເບັນຮາດາດກຳລັງກິນເຫລົ້າຈົນເມົາຢູ່ໃນເຕັນ
ທັງພະອົງແລະກະສັດທີ່ຮອງຈາກພະອົງມີສາມສິບສອງອົງ
ທີ່ຊ່ວຍພະອົງ[17]ຂ້າຣາຊການຫນຸ່ມຜູ້ເຮັດຫນ້າເປັນຜູ້ປົກຄອງຫົວເມືອງທັງຫລາຍໄດ້ຍົກໄປກ່ອນ
ແລ້ວເບັນຮາດາດກໍໄດ້ຮັບລາຍງານຈາກຜູ້ສອດແນມທີ່ພະອົງໄດ້ຊົງສົ່ງອອກໄປວ່າ “ມີຄົນຍົກອອກມາຈາກສະມາເຣຍ
[18]ເບັນຮາດາດໄດ້ກ່າວວ່າ “ບໍ່ວ່າພວກເຂົາອອກມາດ້ວຍສັນຕິຫລືສົງຄາມ
ຈົ່ງຈັບພວກເຂົາມາເປັນຽອ“[19]ດັ່ງນັ້ນຂ້າຣາຊການຫນຸ່ມຜູ້ຜູ້ເຮັດຫນ້າທີ່ເປັນຜູ້ປົກຳຄອງຫົວເມືອງທັງຫລາຍ
ແລະກອງທັບທີ່ໄດ້ຕິດຕາມພວກເຂົາໄດ້ເຄື່ອນອອກຈາກເມືອງ
[20]ຄົນອາຮາມໄດ້ແລ່ນຫນີ ແລະອິດສະຣາເອນກໍໄດ້ໄລ່ຕິດຕາມເຂົາໄປ
ເບັນຮາດາດກະສັດແຫ່ງອາຮາມໄດ້ຊົງມ້າຫນີໄປກັບທະຫານມ້າ[21]ແລ້ວກະສັດອິດສະຣາເອນໄດ້ອອກໄປແລະຊົງໂຈມຕີມ້າແລະລົດມ້າເສິກ
ແລະຊົງປະຫານຄົນອາຮາມຫລາຍຄົນ
[22]ດັ່ງນັ້ນຜູ້ເຜີຍພະວັດຈະນະຄົນນັ້ນໄດ້ມາເຝົ້າກະສັດແຫ່ງອິດສະຣາເອນແລະໄດ້ເວົ້າຕໍ່ພຣະອົງວ່າ“ໄປສາ ຂໍເສີມກຳລັງພະອົງ
ແລະພິຈາລະນາເບິ່ງວ່າ ພະອົງຊົງເຮັດປະການໃດເພາະໃນລະດູໃບໄມ້ຫລົ່ນປີຫນ້າ
ກະສັດອາຮາມຈະຍົກກອງທັບມາສູ້ພະອົງອີກ[23]ຂ້າຣາຊການຄົນຂອງກະສັດອາຮາມໄດ້ເວົ້າກັບພະອົງວ່າ
“ພະທັງຫລາຍຂອງເຈົ້າເປັນພະເຈົ້າແຫ່ງພູຜາ ເຂົາທັງຫລາຍຈຶ່ງເຂັ້ມແຂງກວ່າເຮົາ ແຕ່ຂໍໃຫ້ເຮົາສູ້ຮົບກັບເຂົາໃນທີ່ພຽງ
ແລ້ວເຮົາຕ້ອງເຂັ້ມແຂງກວ່າເຂົາແນ່ນອນເລີຍ
[24]ດັ່ງນັ້ນພະອົງຢ່າເຮັດແນວນີ້ ຂໍຊົງປົດກະສັດທຸກອົງອອກຈາກຕຳແຫນ່ງ
ແລະຊົງຕັ້ງນາຍທະຫານຂຶ້ນແທນ[25]ຈົ່ງເພີ່ມຈຳນວນຄົນຂອງກອງທັບເຂົາແທນສ່ວນພົນຂອງກອງທັບແທນຜູ້ທີ່ໄດ້ສູນເສຍໄປ ມ້າແທນມ້າ
ລົດເສິກແທນລົດເສິກ ແລ້ວເຮົາທັງຫລາຍກໍຈະຮົບເສິກກັບເຂົາໃນທີ່ພຽງພວກເຂົາຈະຕ້ອງເຂັ້ມແຂງກວ່າພວກເຂົາແນ່ນອນເລີຍ“
ດັ່ງນັ້ນເບັນຮາດາດກໍຊົງຟັງສຽງຂອງເຂົາທັງຫລາຍ ແລະໄດ້ຊົງເຮັດຕາມທີ່ພວກເຂົາໄດ້ແນະນຳ
[26]ຫລັງຈາກເລີ່ມປີໃຫມ່
ເບັນຮາດາດໄດ້ລວບລວມຄົນອາຮາມແລະຍົກຂຶ້ນໄປທີ່ເມືອງອາເຟັກຮົບກັບຄົນອິດສະຣາເອນ[27]ຄົນອິດສະຣາເອນຖືກຍົກຖືກອອກໄປຕໍ່ສູ້ກັບພວກເຂົາຄົນອິດສະຣາ
ແຕ່ຄົນອາຮາມໄດ້ເຕັມທ້ອງທົ່ງຫຍ້າໄປຫມົດ

[28]ແລ້ວຄົນຂອງພຣະເຈົ້າຄົນຫນຶ່ງໄດ້ເຂົ້າໄປໄກ້ແລະກ່າວກັບກະສັດອິດສະຣາເອນວ່າ“ ພຣະຢາເວໄດ້ກ່າວດັ່ງນີ້ວ່າ
ພຣະຢາເວເປັນພຣະເຈົ້າແຫ່ງພູເຂົາ ພຣະອົງບໍ່ໄດ້ເປັນພຣະເຈົ້າແຫ່ງທີ່ຕ່ຳເພາະສະນັ້ນ
ເຮົາຈະມອບກອງທັບໃຫຍ່ທັງຫມົດພນີ້ໄວ້ໃນມືຂອງເຈົ້າ ແລະພວກເຈົ້າຈະໄດ້ຮູ້ວ່າ ເຮົາຄືພຣະຢາເວ“
[29]ດັ່ງນັ້ນ ເຂົາທັງຫລາຍກໍໄດ້ຕັ້ງຄ້າຍທະຫານກົງກັນຂ້າມກັນຢູ່ເຈັດວັນ ແລ້ວໃນວັນທີເຈັດການຮົບກໍໄດ້ເລີ່ມຕົ້ນຂຶ້ນ
ອິດສະຣາເອນໄດ້ຂ້າຄົນອາຣາມ ຊຶ່ງເປັນທະຫານລາບຊີເຣຍ 100,000 ຄົນໃນມື້ດຽວ[30]ພວກທີ່ເຫລືອກໍໄດ້ຫນີເຂົ້າເມືອງອາເຟັກ
ແລະກຳແພງເມືອງລົ້ມທັບຄົນນັ້ນສອງຫມື່ນເຈັດພັນຄົນ ເບັນຮາດາດກໍໄດ້ຫນີເຂົ້າໄປໃນຫ້ອງຊັ້ນໃນທີ່ໃນເມືອງ
[31]ພວກຂ້າຣາຊການເບັນຮາດາດໄດ້ກ່າວກັບພະອົງວ່າ“ບັດນີ້ເບິ່ງສາເຮົາໄດ້ຍິນວ່າ ບັນດາກະສັດແຫ່ງອິດສະຣາເອນ ເປັນກະສັດທີ່ເມດຕາ
ຂໍໃຫ້ເຮົາເອົາຜ້າກະສອບມັດແອວແລະເອົາເຊືອກພັນຫົວຂອງເຮົາ ແລະອອກໄປຫາກະສັດແຫ່ງອິດສະຣາເອນ
ບາງທີພະອົງຈະໄວ້ຊີວິດພະອົງ[32]ເພາະສະນັ້ນພວກເຂົາຈຶ່ງໄດ້ເອົາກະສອບມັດແອວ ໄດ້ເອົາເຊືອກພັນຫົວ
ໄດ້ໄປເຝົ້າກະສັດແຫ່ງອິດສະຣາເອນແລະໄດ້ກ່າວວ່າ“ ເບັນຮາດັດຜູ້ຮັບໃຊ້ຂອງພະອົງອາຮາບໄດ້ກ່າວວ່າ ຂໍຊົງໄວ້ຊີວິດຂ້າພະອົງ
“ອາຮາບໄດ້ຕອບວ່າ“ ພະອົງຍັງມີຊີວິດຢູ່ຫວາ? ພະອົງຊົງເປັນພະອານຸຊາຂອງເຮົາ“
[33]ບັດນີ້ຄົນເຫລົ່ານັ້ນໄດ້ຊົງສັງເກດເຫັນເປັນລາງດີຈາກອາຮາບ ດັ່ງນັ້ນພວກເຂົາກໍຮີບຕອບໂດຍໄວວ່າ ພະຍະຄະ
ເບັນຮາດາດພະອານຸຊາຂອງພະອົງຍັງມີຊີວິດຢູ່“ ແລ້ວອາຮາບກ່າວ່າ“ ໄປນຳພະອົງມາສາ“ແລ້ວເບັນຮາດາດກໍອອກມາຫາພະອົງ
ແລ້ວອາຮາບກໍໃຫ້ພະອົງຂຶ້ນໄປເທິງລົດມ້າສຶກຂອງພະອົງ[34]ເບັນຮາດາດໄດ້ກ່າວກັບພະອົງວ່າ “ເມືອງຕ່າງໆຊຶ່ງ
ພໍ່ຂອງຂ້ານ້ອຍຍຶດເອົາໄປຈາກພະຣາຊບິດາຂອງພະອົງນັ້ນ ຂ້ານ້ອຍຂໍຄືນໃຫ້ພະອົງ
ແລະພະອົງຈົ່ງສ້າງຍ່ານການຄ້າຂອງພະອົງໃນເມືອງດາມັສກັດກໍໄດ້ ດັ່ງທີ່ພໍ່ຂອງຂ້ານ້ອຍໄດ້ເຮັດໄວ້ໃນຊາມາເຣຍ ແລ້ວອາຮາບໄດ້ກ່າວວ່າ
“ເຮົາຈະຍອມໃຫ້ພະອົງໄປ ຕາມຂໍ້ຕົກລົງນີ້“ດັ່ງນັ້ນອາຮາບຈຶ່ງໄດ້ເຮັດພັນທະສັນຍາກັບພະອົງແລະປ່ອຍພະອົງໄປ
[35]ມີຜູ້ຫນຶ່ງໃນກຸ່ມທັງຫລາຍຂອງຜູ້ເຜີຍວັດຈະນະ ໄດ້ເວົ້າກັບຫມູ່ຂອງຕົນ ຕາມຄຳສັ່ງພຣະຢາເວວ່າ
“ຂໍທ່ານຕີຂ້ອຍແນ່“ແຕ່ຊາຍຄົນນັ້ນກໍໄດ້ປະຕິເສດບໍ່ຍອມຕີເຂົາ[36]ແລ້ວຜູ້ເຜີຍພຣະວັດຈະນະຈຶ່ງໄດ້ເວົ້າກັບຫມູ່ເຂົາວ່າ
“ເພາະເຈົ້າບໍ່ໄດ້ຟັງສຽງຂອງພຣະຢາເວ ຍາມໃດທີ່ເຈົ້າຈາກຂ້ອຍໄປສິງໂຕ ໂຕຫນຶ່ງ ຈະຂ້າເຈົ້າ“ທັນທີທີ່ຊາຍຄົນນັ້ນໄດ້ຈາກເຂົາໄປ ສິງໂຕ
ໂຕຫນຶ່ງກໍໄດ້ມາຫາເຂົາ ແລະໄດ້ຂ້າເຂົາ
[37]ແລ້ວຜູ້ເຜີຍພຣະວັດຈະນະໄດ້ພົບຊາຍອີກຄົນຫນຶ່ງ ແລະກ່າວວ່າ “ຂໍໃຫ້ເຈົ້າຕີຂ້ອຍ“
ຊາຍຄົນນັ້ນໄດ້ຕີທ່ານແລະເຮັດໃຫ້ທ່ານບາດເຈັບ[38]ແລ້ວຜູ້ເຜີຍພຣະວັດຈະນະນັ້ນຈຶ່ງໄດ້ຈາກໄປ ແລ້ວຈຶ່ງໄດ້ພົບກະສັດຢູ່ທີ່ຫົນທາງ
ເຂົາໄດປອມຕົວເຂົາເອງດ້ວຍຜ້າພັນທີ່ຕາຂອງເຂົາ
[39]ພວກກະສັດໄດ້ຜ່ານໄປ ຜູ້ເຜີຍພະວັດຈະນະກໍກ່າວກັບກະສັດວ່າ“ ຜູ້ຮັບໃຊ້ຂອງພະອົງເຂົ້າໄປໃນກາງເສິກ
ແລ້ວທະຫານໄດ້ຢຸດແລ້ວທະຫານຄົນຫນຶ່ງໄດ້ຢຸດແລະນຳຊາຍຄົນນັ້ນອອກມາໃຫ້ຂ້ານ້ອຍ ບອກວ່າ ຈົ່ງລະວັງຊາຍຄົນນີ້ໄວ້ເດີ
ຖ້າຫລຸດໄປໄດ້ດ້ວຍເຫດການໃດ ຊີວິດຂອງທ່ານຈະຕ້ອງແທນຊີວິດຂອງເຂົາ
ຫລືບໍ່ທ່ານຈະຕ້ອງເສຍເງິນຫນຶ່ງຕະລັນ[40]ແຕ່ຜູ້ໃຊ້ພະອົງໄດ້ຄາວຽກຢູ່ທີ່ນີ້ແລະທີ່ນັ້ນຊາຍຄົນນັ້ນກໍໄດ້ຫນີໄປ“
ແລ້ວກະສັດແຫ່ງອິດສະຣາເອນໄດ້ກ່າວວ່າ “ໂທດຂອງເຈົ້າຕ້ອງເປັນແນວນັ້ນແລະ ເພາະເຈົ້າເອງໄດ້ຕັດສິນແລ້ວ“
[41]ແລ້ວຜູ້ເຜີຍພຣະວັດຈະນະກໍໄດ້ເອົາຜ້າທີ່ພັນຕາຂອງເຂົາອອກ
ແລະກະສັດອິດສະຣາເອນກໍໄດ້ຈື່ທ່ານວ່າເປັນຫນຶ່ງໃນບັນດາຜູ້ເຜີຍພຣະວັດຈະນະ[42]ຜູ້ເຜີຍພຣະວັດຈະນະຈຶ່ງໄດ້ທູນກະສັດວ່າ“
ພຣະຢາເວໄດ້ກ່າວດັ່ງນີ້“ ເພາະເຈົ້າໄດ້ປ່ອຍຊາຍຄົນທີ່ຢູ່ໃນມືຂອງເຈົ້າ ຜູ້ຊຶ່ງເຮົາໄດ້ກຳນົດໃຫ້ຕາຍ
ດັ່ງນັ້ນຊີວິດຂອງເຈົ້າຈະຕ້ອງແທນຊີວິດຂອງເຂົາ ແລະປະຊາຊົນຂອງເຈົ້າແທນປະຊາຊົນຂອງເຂົາ“[43]ດັ່ງນັ້ນ
ກະສັດແຫ່ງອິດສະຣາເອນກໍໄດ້ເຂົ້າໄປໃນວັງ ດ້ວຍອາລົມຢາກຮ້າຍ ແລະໄດ້ມາເຖິງສະມາເຣຍ


generated on Tue Jun 17 19:01:42 2025

# 21

1ບັດນີ້ ໃນບາງເວລາຕໍ່ມາ ນາໂບດຊາວຢິດຊະເຣນມີສວນອະງຸ່ນຢູ່ໃນຢິດສະເຣນ
ໃກ້ວັງຂອງອາຮາບກະສັດແຫ່ງສະມາເຣຍ2ອາຮາບໄດ້ກ່າວກັບໂບດວ່າ ຈົ່ງເອົາສວນອະງຸ່ນຂອງເຈົ້າໃຫ້ເຮົາເຖີດ
ເພື່ອເຮົາຈະໄດ້ເຮັດສວນຜັກ ເພາະຢູ່ໃກ້ຣາຊວັງຂອງເຮົາ ເພື່ອແລກປ່ຽນກັນ ເຮົາຈະໃຫ້ສວນອະງຸ່ນທີ່ດີກວ່ານີ້ ຫລືຖ້າເຈົ້າເຫັນດີ
ເຮົາກໍຈະໃຫ້ເງິນສົມກັບສວນນັ້ນ"

3ແຕ່ນາໂບດໄດ້ກ່າວກັບອາຮາບວ່າ
"ຂໍພະຢາເວຫ້າມຂ້ານ້ອຍບໍ່ໃຫ້ຍົກມໍລະດົກຂອງບັນພະບູລຸດແກ່ທ່ານ4ດັ່ງນັ້ນອາຮາບຈຶ່ງເຂົ້າໃນວັງດ້ວຍອາລົມບໍ່ດີ
ເພາະວ່າຄຳຕອບຂອງນາໂບດທີ່ໄດ້ຕອບທ່ານ ເມື່ອໄດ້ເວົ້າວ່າ "ຂ້ານ້ອຍບໍ່ເຫັນດີທີ່ຈະຍົກມໍລະດົກຂອງບັນພະບູລຸດຂອງຂ້ານ້ອຍໃຫ້ພະອົງ"
ແລະທ່ານກໍນອນປິ່ນຫນ້າເຂົ້າຝາເຫິງຕຽງທັງບໍ່ຍອມກິນຫຍັງເລີຍ
5ເຢເຊເບນເມຍຂອງພະອົງໄດ້ເຂົ້າມາເຝົ້າພະອົງ ແລະໄດ້ຖາມພະອົງວ່າ "ເປັນຫຍັງພະອົງຈຶ່ງອຸກໃຈຈົນບໍ່ຍອມກິນຫຍັງເລີຍ?
"6ພະອົງໄດ້ຕອບນາງວ່າ ເພາະເຮົາໄດ້ເວົ້າກັບນາໂບດຊາວຢິດຊະເຣນແລະໄດ້ກ່າວວ່າ ຈົ່ງຂາຍສວນອະງຸ່ນເຈົ້າໃຫ້ເຮົາ ຖ້າເຈົ້າພໍໃຈ
ເຮົາຈະໃຫ້ສວນອະງຸ່ນອີກແຫ່ງຫນຶ່ງແກ່ເຈົ້າ ແລ້ວເຂົາໄດ້ຕອບເຮົາວ່າ
ຂ້ານ້ອຍບໍ່ຖວາຍສວນອະງຸ່ນຂອງຂ້ານ້ອຍໃຫ້ພະອົງ7ດັ່ງນັ້ນເຢເຊເບນກ່າວກັບເມຍພະອົງແລະໄດ້ທູນພະອົງວ່າ
"ພະອົງຍັງເປັນຜູ້ຄອບຄອງອານາຈັກອິດສະຣາເອນບໍ່ແມ່ນຫວາ? ຂໍຊົງລຸກຂຶ້ນຈາກຕຽງດຽວນີ້
ເຮັດໃຫ້ໃຈສະບາຍແລະກິນເຂົ້າສານ້ອງຈະເອົາສວນອະງຸ່ນຂອງນາໂບດໃຫ້ອ້າຍດອກ"
8ດັ່ງນັ້ນເຢເຊເບນຈຶ່ງໄດ້ຂຽນຈົດຫມາຍຂອງອາຮາບ ບາງສະບັບແລະໄດ້ເຊັນຊື່ລົງ
ຕີຕາທັບຂອງເພິ່ນໃສ່ແລ້ວກໍສົ່ງຈົດຫມາຍນີ້ໄປຫາຂ້າຣາຊການພ້ອມທັງປະຊາຊົນ ທີ່ຢູ່ໃກ້ນາໂບດ9ນາງໄດ້ຂຽນຈົດຫມາຍວ່າ"
ຈົ່ງປະກາດໃຫ້ຖືອົດອາຫານ ແລະໃຫ້ນາໂບດນັ່ງສູງເດັ່ນທ່າມກາງປະຊາຊົນ10ນອກຈາກນີ້ໃຫ້ຄົນສັດຊື່ຄົນຢູ່ກັບເຂົາດ້ວຍໃຫ້ພວກເຂົາເວົ້າວ່າ
ເຈົ້າໄດ້ແຊ່ງດ່າພຣະເຈົ້າແລະກະສັດ"" ແລ້ວພາເຂົາອອກໄປແລະເອົາຫີນດຶກໃສ່ເຂົາໃຫ້ຕາຍ
11ດັ່ງນັ້ນຄົນຂອງເມືອງນັ້ນຄືບັນດາຜູ້ມັ່ງຄັ່ງອາໄສຢູ່ໃນເມືອງຂອງນາໂບດນັ້ນ
ໄດ້ທຳລາຍທີ່ເຢເຊເບນໄດ້ຂຽນຈົດຫມາຍໄປເຖິງພວກເຂົານັ້ນ12ພວກເຂົາໄດ້ປະກາດໃຫ້ຖືອົດອາຫານແລະໃຫ້ນາໂບດນັ່ງບ່ອນນັ່ງສູງເດັ່ນທ່າມກາງປະຊາຊົນ13ຄົນ
ແລະນັ່ງຢູ່ທາງຫນ້ານາໂບດພວກເຂົາໄດ້ເວົ້າໃສ່ຮ້າຍຕໍ່ຫນ້າປະຊາຊົນວ່າ "ນາໂບດໄດ້ແຊ່ງດ່າພຣະເຈົ້າແລະກະສັດ"
ເຂົາທັງຫລາຍຈຶ່ງພານາໂບດອອກໄປນອກເມືອງ14ແລ້ວເອົາຫີນດຶກໃສ່ເຂົາຈົນຕາຍແລ້ວພວກຜູ້ອາວຸໂສກໍໄດ້ສົ່ງຄ່າວໄປບອກເຢເຊເບນວ່າ
"ນາໂບດຖືກຫີນດຶກໃສ່ແລະຕາຍແລ້ວ"
15ດັ່ງນັ້ນເມື່ອເຢເຊເບນໄດ້ຍິນວ່ານາໂບດຖືກຫີນດຶກໃສ່ຈົນຕາຍແລ້ວນາງຈຶ່ງໄດ້ກ່າວກັບອາຮາບວ່າ"
ຂໍຊົງລຸກຂຶ້ນແລະຊົງໄດ້ຍຶດສວນຂອງນາໂບດຊາວຢິດຊະເຣນ ຊຶ່ງເຂົາໄດ້ປະຕິເສດບໍ່ຢາກຂາຍໃຫ້ພະອົງ16ເພາະວ່ານາໂບດໄດ້ຕາຍແລ້ວ
ພະອົງກໍໄດ້ຊົງລຸກຂຶ້ນ ລົງໄປສວນຂອງນາໂບດ ຊາວຢິດຊະເຣນ ເພື່ອຍຶດເອົາສວນນັ້ນ
17ແລ້ວພຣະວັດຈະນະຂອງພຣະຢາເວໄດ້ມາເຖິງເອລີຢາວ່າ18"ຈົ່ງລຸກຂຶ້ນໄປແລະພົບອາຮາບກະສັດແຫ່ງອິດສະຣາເອນ
ຜູ້ຢູ່ໃນເມືອງຊະມາເຣຍ ເຂົາຢູ່ໃນສວນຂອງນາໂບດທີ່ເຂົາລົງໄປຍຶດເອົາມາ
19ເຈົ້າຈົ່ງເວົ້າກັບເຂົາວ່າ" ພຣະຢາເວໄດ້ກ່າວດັ່ງນີ້ວ່າ "ເຈົ້າໄດ້ຂ້າຄົນແລະໄດ້ຍຶດເອົາກຳມະສິດມາບໍ? ແລະເຈົ້າຈົ່ງເວົ້າກັບເຂົາວ່າ
"ໃນບ່ອນທີ່ຫມາເລຍເລືອດຂອງນາໂບດ ຫມາຈະເລຍເລືອດຂອງເຈົ້າດ້ວຍ ແມ່ນແລ້ວລະ ເລືອດຂອງເຈົ້າ"20ອາຮາບໄດ້ເວົ້າກັບເອລີຢາວ່າ" ໂອ
ສັດຕູຂອງເຮົາ ເຈົ້າຈະພົບເຮົາເຂົ້າແລ້ວບໍ? ຂ້ານ້ອຍໄດ້ພົບພະອົງເຂົ້າແລ້ວ
ເພາະວ່າພະອົງໄດ້ຂາຍພະອົງເອງເຂົ້າເຮັດຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ
21ພຣະຢາເວໄດ້ກ່າວຕໍ່ທ່ານວ່າ ເບິ່ງສາ ເຮົາຈະນຳໄພພິບັດມາເຫນືອເຈົ້າ ແລະຈະກວາດເຈົ້າອອກໄປໃຫ້ຫມົດ ແລະຈະກຳຈັດຜູ້ຊາຍທຸກຄົນ
ທັງທີ່ເປັນທາດແລະເປັນຄົນອິດສະຣາເອນອອກຈາກເຈົ້າ22ເຮົາຈະເຮັດໃຫ້ຣາຊວົງຂອງເຈົ້າຄືຣາຊວົງຂອງເນບັດແລະຄືຣາຊວົງຂອງບາອາຊາ
ລູກຂອງອາຮີຢາ ເພາະເຈົ້າຈະເຮັດໃຫ້ເຮົາໃຈຮ້າຍ ແລະເພາະເຈົ້າຈະເຮັດໃຫ້ອິດສະຣາເອນເຮັດບາບດ້ວຍ
23ພຣະຢາເວໄດ້ກ່າວວ່າສ່ວນເຢເຊເບນຫມາຈະກິນເຢເຊເບນທີ່ຂ້າງກຳແພງຢິດສະເຣນ "24ຄົນໃດໃນຣາຊວົງຂອງອາຮາບທີ່ຕາຍໃນເມືອງ
ຫມາຈະກິນ ແລະຄົນໃດໃນຣາຊວົງຂອງເຂົາທີ່ຕາຍໃນທົ່ງນາ ນົກຫລືແຮ້ງຈະກິນ
25ບໍ່ມີໃຜຄືອາຮາບ ຜູ້ຊຶ່ງໄດ້ຂາຍຕົນເອງ ເພື່ອເຮັດສິ່ງທີ່ຊົ່ວໃນສາຍພຣະເນດຂອງພຣະຢາເວ
ຜູ້ທີ່ເຢເຊເບນເມຍໄດ້ຍົວະໃຫ້ເຮັດບາບ26ອາຮາບໄດ້ເຮັດສິ່ງທີ່ຫນ້າລັງກຽດຫລາຍຄືພະອົງໄດ້ຕິດຕາມຮູບເຄົາລົບ
ຕາມທຳນຽມຂອງຄົນອາໂມໄລທີ່ໄດ້ເຮັດ ຜູ້ຊຶ່ງພຣະຢາເວໄດ້ເຮັດໃຫ້ອອກໄປໃຫ້ພົ້ນຫນ້າປະຊາຊົນອິດສະຣາເອນ
27ເມື່ອອາຮາບໄດ້ຍິນພຣະວັດຈະນະເຫລົ່ານັ້ນ ພະອົງໄດ້ສີກເຄື່ອງພະອົງແລະໄດ້ໃສ່ຜ້າກະສອບ ໄດ້ຊົງຖືອົດອາຫານ
ແລະນອນຢູ່ແຕ່ໃນຜ້າກະສອບເຂົາ
ແລະຊົງໂສກເສົ້າຫລາຍ28ແລ້ວພຣະວັດຈະນະຂອງພຣະຢາເວໄດ້ມາຍັງເອລີຢາວ່າ29ເຈົ້າໄດ້ເຫັນອາຮາບຖ່ອມໂຕລົງຕໍ່ຫນ້າເຮົາແລ້ວບໍ?
ເພາະເຂົາໄດ້ຖ່ອມໂຕເຂົາລົງຕໍ່ເຮົາ ເຮົາຈະບໍ່ນຳໄພພິບັດມາຍັງສະໄຫມຂອງເຂົາ
ແຕ່ເຮົາຈະນຳເຫດຮ້າຍມາເຫນືອຣາຊວົງຂອງເຂົາໃນສະໄຫມລູກຊາຍຂອງເຂົາ"

22 1ສາມປີຜ່ານໄປໂດຍປາສະຈາກສົງຄາມລະຫວ່າງອາຣາບກັບອິດສະຣາເອນ2ແລ້ວເມື່ອປະມານໃນປີທີສາມ
ເຢໂຮຊາຟັດກະສັດຢູດາໄດ້ສະເດັດລົງເຝົ້າກະສັດແຫ່ງອິດສະຣາເອນ

3ບັດນີ້ກະສັດແຫ່ງອິດສະຣາເອນໄດ້ກ່າວຖາມພວກຂ້າຣາຊການຂອງພະອົງວ່າ “ພວກທ່ານຮູ້ຫລືບໍ່ວ່າ ຣາໂມດໃນກີເຣອາດເປັນຂອງພວກເຮົາ
ແຕ່ເຮົາຍັງຈະເສີຍຢູ່ ບໍ່ຍຶດຄືນຈາກກະສັດແຫ່ງອາຣາບບໍ?“4ດັ່ງນັ້ນ
ພະອົງໄດ້ກ່າວກັບເຢໂຮຊາຟັດວ່າ“ທ່ານຈະຍົກທັບໄປຮົບເສິກທີ່ຣາໂມດກີເຣອາດກັບຂ້ານ້ອຍບໍ່?
ແລະເຢໂຮຊາຟັດໄດ້ຕອບກະສັດອິດສະຣາເອນວ່າ“ ຂ້ານ້ອຍກັບພະອົງເປັນຄືຄົນດຽວກັນ ປະຊາຊົນຂອງຂ້ານ້ອຍກໍເປັນປະຊາຊົນຂອງພະອົງ
ແລະມ້າຂອງຂ້ານ້ອຍກໍເປັນມ້າຂອງພະອົງ“
5ເຢໂຮຊາຟັດໄດ້ກ່າວກັບກະສັດແຫ່ງອິດສະຣາເອນວ່າ“
ຂໍສະແຫວງການຊົງນໍາຂອງພຣະຢາເວກ່ອນວ່າເຮົາຄວນເຮັດແນວໃດ“6ແລ້ວກະສັດແຫ່ງອິດສະຣາເອນກໍໄດ້ເອີ້ນປະຊຸມພວກເຜີຍພຣະວັດຈະນະສີ່ຮ້ອຍຄົນ
ແລະໄດ້ກ່າວກັບພວກເຂົາວ່າ“ ຄວນທີ່ເຮົາຈະໄປເຮັດສົງຄາມ ໂຈມຕີຣາໂມດກີເຣອາດບໍ່? ເຂົາທັງຫລາຍໄດ້ຕອບວ່າ
“ຂໍຊົງໂຈມຕີເຖີດເພາະອົງພຣະຜູ້ເປັນເຈົ້າຈະຊົງມອບໄວ້ໃນພະຫັດຂອງກະສັດ“
7ແຕ່ເຢໂຮຊາຟັດໄດ້ກ່າວວ່າ “ທີ່ນີ້ບໍ່ມີຜູ້ເຜີຍພຣະວັດຈະນະຂອງພຣະຢາເວອີກແລ້ວບໍ
ທີ່ເຮົາຈະຖາມໄດ້?”8ກະສັດອິດສະຣາເອນໄດ້ກ່າວກັບເຢໂຮຊາຟັດວ່າ ” ຍັງມີຊາຍຄົນຫນຶ່ງຊຶ່ງເຮົາຈະໃຫ້ທູນຖາມພຣະຢາເວ
ຄືມີຄາຍາລູກຊາຍຂອງອິມຣາ ແຕ່ເຮົາເອງກຽດຊັງເຂົາເພາະເຂົາບໍ່ເຄີຍທໍານາຍເລື່ອງດີກ່ຽວກັບເຮົາເລີຍ” ແຕ່ເຢໂຮຊາຟັດໄດ້ກ່າວວ່າ ”
ຂໍກະສັດຢ່າໄດ້ກ່າວດັ່ງນັ້ນເລີຍ”9ແລ້ວກະສັດອິດສະຣາເອນຈຶ່ງເອີ້ນເອົາເຈົ້າຫນ້າທີ່ປະຈໍາວັງມາແລ້ວບອກແລ້ວບອກລາວໄປນໍາເອົາມີກາຍາ
ລູກຊາຍຂອງອິມຣາມາທັນທີ
10ບັດນີ້ ອາຣາບກະສັດແຫ່ງອິດສະຣາເອນ
ແລະເຢໂຮຊາຟັດກະສັດແຫ່ງຢູດາໄດ້ຕ່າງຄົນຕ່າງນຸ່ງເຄື່ອງກະສັດນັ່ງເທິງບັນລັງຂອງຕົນທີ່ລານຟາດເຂົ້ານອກປະຕູເມືອງຊາມາເຣຍ
ແລະຜູ້ເຜີຍພຣະວັດຈະນະທັງຫມົດກົນວາຍຕໍ່ຫນ້າເພິ່ນຢູ່ທີ່ນັ້ນຄົນຫນຶ່ງໃນພວກເຂົາຊື່ວ່າເຊດີກີຢາລູກຊາຍຂອງ11ເຄນາໄດ້ເອົາເຫລັກເຮັດເປັນເຂົາ
ແລ້ວເວົ້າວ່າ” ພຣະຢາເວໄດ້ກ່າວດັ່ງນີ້ວ່າ
ດ້ວຍສິ່ງເຫລົ່ານີ້ເຈົ້າຈະເອົາຄົນອາຣາບໄປຈົນພວກເຂົາແພ້ຢ່າງສິ້ນເຊີງ”12ແລ້ວພວກຜູ້ທໍານວຍຄົນອື່ນໆກໍເວົ້າຢ່າງດຽວກັນ”
ຂໍສະເດັດໄປຕີຣາໂມດກີເລອາດແລະມີໄຊຊະນະເຖີດ ເພາະພຣະຢາເວຈະໄດ້ຊົງມອງເມືອງນັ້ນໄວ້ໃນພຣະຫັດຂອງກະສັດ”
13ຜູ້ຊື່ສານທີ່ໄປເອີ້ນມີກາອາຢາໄດ້ບອກທ່ານວ່າ ”ນີ້ແລະ
ຖ້ອຍຄໍາຂອງບັນດາຜູ້ເຜີຍພຣະວັດຈະນະສິ່ງທີ່ເວົ້າເປັນນົ່ງຄົນແກ່ກະສັດເປັນສຽງດຽວກັນ
ຂໍໃຫ້ຖ້ອຍຄໍາຂອງທ່ານເຫມືອນຢ່າງຖ້ອຍຄໍາຄົນຫນຶ່ງໃນນັ້ນ” ແລະເວົ້າແຕ່ສິ່ງທີ່ເປັນນົ່ງຄົນ”14ມີຄາຢາໄດ້ຕອບວ່າ”
ພຣະຢາເວຊົງພຣະຊົນຢູ່ບ່ອນໃດ ສິ່ງທີ່ພຣະຢາເວໄດ້ກ່າວກັບຂ້ານ້ອຍ ຂ້ານ້ອຍກໍເວົ້າຢ່າງນັ້ນ”15ເມື່ອທ່ານໄດ້ມາເຝົ້າກະສັດ
ກະສັດໄດ້ຖ່າມທ່ານວ່າ” ມີກາອາຢາຕອບພຣະອົງວ່າ ” ຂໍເຊີນສະເດັດຂຶ້ນໄປຕີ ແລະມີໄຊຊະນະ ພຣະຢາເວໄດ້ຊົງມອບໄວ້ໃນມືຂອງກະສັດ
16ແລ້ວກະສັດໄດ້ກ່າວກັບທ່ານວ່າ ” ເຮົາໄດ້ໃຫ້ເຈົ້າປະຕິຍານຈັກເທື່ອແລ້ວວ່າ ເຈົ້າຈະເວົ້າກັບເຮົາແຕ່ຄວາມຈິງໃນພຣະນາມພຣະຢາເວ?
17ດັ່ງນັ້ນມີຄາຢາໄດ້ກ່າວວ່າ ” ຂ້ານ້ອຍໄດ້ເຫັນຄົນອິດສະຣາເອນທັງຫມົດກະຈາຍຕາມພູເຂົາປານແກະທີ່ບໍ່ມີຜູ້ລ້ຽງ
ໃຫ້ພວກເຂົາຕ່າງກັບບ້ານຂອງເຂົາໂດຍສັນຕິພາບເຖີດ
18ດັ່ງນັ້ນກະສັດແຫ່ງອິດສະຣາເອນຈຶ່ງໄດ້ກ່າວວ່າ ”ເຮົາບອກທ່ານແລ້ວບໍ່ແມ່ນບໍ? ເຂົາຈະບໍ່ທໍານວຍເລື່ອງດີກ່ຽວກັບເຮົາເລີຍ
ມີແຕ່ເລື່ອງຮ້າຍເທົ່ານັ້ນ?”19ມີກາອີຢາໄດ້ບອກວ່າ” ສະນັ້ນ ຂໍໄດ້ຟັງພຣະວັດຈະນະຂອງພຣະຢາເວ
ຂ້ານ້ອຍໄດ້ເຫັນພຣະຢາເວຢູ່ເທິງພຣະທີ່ນັ່ງຂອງພຣະອົງ ແລະກອງທັບທັງຫມົດແຫ່ງທ້ອງຟ້າຢືນຂ້າງໆພຣະອົງ
ທັງຂ້າງຂວາແລະຂ້າງຊ້າຍມືຂອງພຣະອົງ20ພຣະຢາເວໄດ້ຊົງກ່າວວ່າ, ”ໃຜຈະຫລອກລວງອາຣາບໃຫ້ຂຶ້ນໄປ
ເພື່ອທີ່ເຂົາຈະລົ້ມລົງທີ່ເມືອງຣາໂມດກີເຣອາດ?” ບາງຄົນກໍບອກເວົ້າຢ່າງຫນຶ່ງ, ອີກບາງຄົນກໍເວົ້າຢ່າງຫນຶ່ງ
21ແລ້ວມີວິນຍານຫນຶ່ງອອກມາຢືນຢູ່ພຣະພັກພຣະຢາເວ ແລະໄດ້ກ່າວວ່າ” ຂ້ານ້ອຍເອງຈະຊັກນໍາເຂົາ ແລະພຣະຢາເວໄດ້ກ່າວວ່າ
ຈະເຮັດແນວໃດ?22ວິນຍານຕອບວ່າ ຂ້ານ້ອຍຈະອອກໄປ ແລະຈະເປັນວິນຍານມຸສາຢູ່ໃນປາກຂອງຜູ້ເຜີຍພຣະວັດຈະນະທຸກຄົນຂອງເຂົາ
ພຣະອົງໄດ້ກ່າວວ່າ ເຈົ້າໄປຊັກນໍາເຂົາໄດ້ ແລະເຈົ້າຈະເຮັດສໍາເລັດ ຈົ່ງໄປແລະເຮັດຕາມນັ້ນເຖີດ23ສະນັ້ນ ເບິ່ງແມ
ພຣະຢາເວໄດ້ໃສ່ວິນຍານມຸສາໃນປາກຂອງຜູ້ເຜີຍພຣະວັດຈະນະທຸກຄົນຂອງພຣະອົງ ແລ້ວພຣະຢາເວໄດ້ກ່າວເລື່ອງຮ້າຍກ່ຽວກັບພຣະອົງ”
24ແລ້ວມີກາອີຢາຕອບວ່າ” ມີວິທີໃດທີ່ພະວິນຍານຂອງພຣະຢາເວໄປຈາກຂ້ານ້ອຍແລ້ວເວົ້າກັບເຈົ້າໄດ້?”25ມີກາອີຢາໄດ້ຕອບວ່າ” ນີ້ແລະ
ເຈົ້າຈະເຫັນໃນວັນນັ້ນ ເມື່ອເຈົ້າເຂົ້າໄປລີ້ຢູ່ໃນຫ້ອງຊັ້ນໃນ”
26ກະສັດແຫ່ງອິດສະຣາເອນໄດ້ກ່າວກັບຂ້າຣາຊການຂອງພະອົງວ່າ ” ຈົ່ງຈັບມີກາອີຢາແລ້ວສົ່ງເຂົາກັບໄປຫາອາໂມນເຈົ້າເມືອງແລະ
ແລະນໍາລາວໄປຫາເຈົ້າຊາຍ27ກະສັດໄດ້ກ່າວດັ່ງນີ້ວ່າ ” ເອົາຄົນນີ້ໄປຈໍາຄຸກໄວ້ ໃຫ້ອາຫານກັບນ້ໍາຢ່າງຈໍາກັດ
ຈົນກວ່າເຮົາຈະກັບມາໂດຍສັນຕິພາບ”28ແລ້ວມີກາອີຢາໄດ້ກ່າວວ່າ ” ຖ້າພະອົງກັບມາໂດຍສັນຕິພາບແທ້ໆ
ພຣະຢາເວກໍໄດ້ກ່າວຜ່ານຂ້ານ້ອຍ” ແລ້ວທ່ານໄດ້ກ່າວອີກວ່າ ” ປະຊາຊົນທັງຫລານເອີຍ ຈົ່ງຟັງເຖີດ”
29ດັ່ງນັ້ນອາຣາບກັບກະສັດແຫ່ງອິດສະຣາເອນກັບເຢໂຮຊາຟັດ ກະສັດແຫ່ງຢູດາຈຶ່ງໄດ້ຂຶ້ນໄປຍັງຣາໂມດ
ກີເຣອາດ30ກະສັດອິດສະຣາເອນໄດ້ກ່າວກັບເຢໂຮຊາຟັດວ່າ” ເຮົາຈະປອມໂຕເຂົ້າເຮັດເສິກ
ແຕ່ທ່ານຈົ່ງໃສ່ເຄື່ອງຂອງກະສັດຂອງທ່ານດັ່ງນັ້ນກະສັດແຫ່ງອິດສະຣາເອນກໍໄດ້ປອມໂຕແລະໄດ້ເຂົ້າເຮັດເສິກ
31ບັດນີ້ກະສັດແຫ່ງອາຣາບໄດ້ສັ່ງບັນດາແມ່ທັບຣົດມ້າເສິກຂອງພະອົງທັງສາມສິບສອງຄົນວ່າ ”ຢ່າຮົບກັບທະຫານໃຫຍ່ນ້ອຍ
ແຕ່ຮົບສະເພາະກະສັດແຫ່ງອິດສະຣາເອນ”32ເມື່ອບັນດາແມ່ທັບລົດມ້າເສິກໄດ້ເຫັນເຢໂຮຊາຟັດ ເຂົາທັງຫລາຍກໍໄດ້ເວົ້າວ່າ”
ເປັນກະສັດອິດສະຣາເອນແທ້ໆ” ພວກເຂົາຈຶ່ງຫັນໄປສູ້ຮົບກັບພະອົງ ດັ່ງນັ້ນ

ເຢໂຮຊາຟັດໄດ້ຮ້ອງຂຶ້ນ[33]ຕໍ່ມາເມື່ອບັນດາແມ່ທັບລົດມ້າເຫັນວ່າບໍ່ແມ່ນກະສັດອິດສະຣາເອນ
ພວກເຂົາກໍໄດ້ຫັນລົດມ້າກັບຈາກການໄລ່ຕາມພະອົງ
[34]ແຕ່ໄດ້ມີຊາຍຄົນຫນຶ່ງໄດ້ກົ່ງທະນູສຸ່ມໃສ່ຖືກກະສັດແຫ່ງອິດສະຣາເອນ ລະຫວ່າງເກັດເກາະແລະແຜ່ນບັງ
ພະອົງຈຶ່ງໄດ້ຮັບສັ່ງຄົນຂັບລົດມ້າວ່າ " ຫັນກັບ ພາເຮົາອອກໄປຈາກການຮົບ ເພາະເຮົາບາດເຈັບຫນັກແລ້ວ
[35]ວັນນັ້ນການຮົບໄດ້ດຸເດືອດຂຶ້ນ
ເຂົາກໍໄດ້ໂຈມກະສັດຂຶ້ນລົດມ້າເສີກຄໍາໂຕຢູ່ປຶ່ນຫນ້າໄປທາງທະຫານຊີເຣຍເລືອດຂອງເພິ່ນໄຫລເຕັກຫລັງລົບຮົບ
ພໍເຖິງຍາມແລງມາເພິ່ນກໍສິ້ນໃຈຕາຍ[36]ແລ້ວເວລາດວງອາທິດກໍາລັງຈະຕົກ ມີສຽງຮ້ອງທົ່ວກອງທັບວ່າ
"ໃຫ້ທຸກຄົນກັບໄປເມືອງແລະພູມລໍາເນົາຂອງໂຕເອງ"
[37]ດັ່ງນັ້ນເມື່ອກະສັດອາຮາບໄດ້ຕາຍແລ້ວ ເຂົາກໍຖືກນໍາມາທີ່ນະຄອນຊາມາເຣຍ
ແລະພວກເຂົາໄດ້ຝັງເພິ່ນໃນນະຄອນຊາມາເຣຍ[38]ພວກເຂົາໄດ້ລ້າງລົດຮົບທີ່ບໍ່ນ້ໍາແຫ່ງຊາມາເຣຍແລະພວກຫມາກໍເລຍເລືອດຂອງເພິ່ນ(ທີ່ນີ້ພວກຜູ້ຍິງໂສເພນີໄດ້ລ
ຕາມພຣະວັດຈະນະຂອງພຣະຢາເວຊຶ່ງໄດ້ກ່າວໄວ້.
[39]ສ່ວນສິ່ງອື່ນໆຂອງກະສັດອາຮາບ ແລະທຸກສິ່ງທີ່ເພິ່ນໄດ້ເຮັດ
ແລະຣາຊວັງຊ້າງຊຶ່ງເພິ່ນໄດ້ສ້າງໄວ້ຕະຫລອດຈົນຮອດເມືອງທັງຫມົໄດທີ່ເພິ່ນໄດ້ສ້າງ
ສິ່ງທັງຫມົດນີ້ໄດ້ບັນທຶກໃນຫນັງສືຂ່າວຄາວກະສັດແຫ່ງອິດສະຣາເອນບໍ່ແມ່ນບໍ?[40]ດັ່ງນັ້ນ
ອາຮາບໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງເພິ່ນແລ້ວ ອາຮາຊີຢາລູກຊາຍຂອງເພິ່ນກໍຂຶ້ນເປັນກະສັດປົກຄອງແທນ
[41]ແລ້ວເຢໂຮຊາຟັດລູກຂອງອາສາ ໄດ້ຂຶ້ນປົກຄອງເປັນກະສັດແຫ່ງອິດສະຣາເອນ[42]ເຢໂຮຊາຟັດມີອາຍຸໄດ້ສາມສິບຫ້າປີ
ເມື່ອເພິ່ນໄດ້ເລີ່ມປົກຄອງ ແລະເພິ່ນໄດ້ຄອງຣາດໃນນະຄອນເຢຣູຊາເລັມຊາວຫ້າປີ ແລະແມ່ຂອງເພິ່ນມີຊື່ວ່າອາຊູບາ ລູກຍິງຂອງຊິນຮີ
[43]ເພິ່ນໄດ້ຊົງດໍາເນີນຕາມທາງທັງຫມົດຂອງອາສາພໍ່ຂອງເພິ່ນ ແລະບໍ່ໄດ້ຫັນເຫຈາກທາງນັ້ນ
ເພິ່ນໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍຕາຂອງພຣະຢາເວ ແຕ່ຂາບໄຫວ້ທັງຫລາຍນັ້ນຍັງບໍ່ໄດ້ທໍາລາຍ ປະຊາຊົນຍັງຄົງຖວາຍເຄື່ອງບູຊາ
ແລະເຄື່ອງເຜົາຫອມຢູ່ເທິງບ່ອນຂາບໄຫວ້ເຫລົ່ານັ້ນ[44]ເຢໂຮຊາຟັດໄດ້ເຮັດສັນຍາສັນຕິພາບກັບກະສັດແຫ່ງອິດສະຣາເອນດ້ວຍ
[45]ສ່ວຍສິ່ງອື່ນໆ ຂອງເຢໂຮຊາຟັດ ແລະອໍານາດທີ່ເພິ່ນໄດ້ສໍາແດງ
ແລະສົງຄາມທີ່ໄດ້ເຮັດສິ່ງທັງຫມົດນີ້ໄດ້ບັນທຶກໄວ້ໃນຫນັງສືຂ່າວຄາວກະສັດແຫ່ງຢູດາບໍ່ແມ່ນບໍ?[46]ເພິ່ນກໍໄດ້ຊົງກວາດລ້າງຈາກແຜ່ນດິນຄື
ໂສເພນີທີ່ຮັບໃຊ້ຕາມແທ່ນບູຊາຕ່າງໆ ທີ່ເຫລືອຢູ່ ຊຶ່ງຍັງເຫລືອໃນສະໄຫມຂອງອາສາພໍ່ຂອງເພິ່ນນັ້ນ[47]ບໍ່ມີກະສັດໃນເອໂດມ
ແຕ່ມີຜູ້ສໍາເລັດຣາຊການປົກຄອງແທນ
[48]ເຢໂຮຊາຟັດໄດ້ຕໍ່ເຮືອກໍາປັ່ນມະຫາສະຫມຸດຫລາຍລໍາ ເພື່ອໄປຂົນທອງຄໍາທີ່ປະເທດໂອຟີ ແຕ່ໄປບໍ່ຮອດ
ເພາະເຮືອແຕກທີ່ເມືອງເອຊີໂອນເກເບ[49]ແລ້ວອາຮາຊີຢາລູກຊາຍຂອງອາຮາບໄດ້ກ່າວກັບເຢໂຮຊາຟັດວ່າ,"
ຂໍໃຫ້ຄົນຂອງຂ້ານ້ອຍນັ່ງເຮືອກັບຄົນຂອງທ່ານ" ແຕ່ເຢໂຮຊາຟັດບໍ່ຍອມ[50]ເຢໂຮຊາຟັດໄດ້ລ່ວງຫລັບໄປຢູ່ກັບບັນພະບູລຸດຂອງເພິ່ນ
ແລະເຂົາກໍໄດ້ຝັງສົບໄວ້ກັບບັນພະບູລຸດຂອງເພິ່ນໃນນະຄອນດາວິດ ແລະເຢໂຮຣາມລູກຊາຍຂອງເພິ່ນກໍໄດ້ຂຶ້ນເປັນກະສັດປົກຄອງແທນ
[51]ອາຮາຊີຢາລູກຊາຍຂອງອາຮາບໄດ້ເລີ່ມປົກຄອງອິດສະຣາເອນໃນນະຄອນຊາມາເຣຍ
ໃນປີທີສິບເຈັດແຫ່ງຣາຊການເຢໂຮຊາຟັດກະສັດແຫ່ງຢູດາ
ແລະເພິ່ນໄດ້ປົກຄອງອິດສະຣາເອນສອງປີ[52]ເພິ່ນໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ ແລະໄດ້ດໍາເນີນໃນທາງຂອງພໍ່ຂອງເພິ່ນ
ແລະໃນທາງຂອງແມ່ຂອງເພິ່ນ ແລະໃນທາງຂອງເຢໂຣໂບອາມລູກຊາຍຂອງເນບັດ
ໃນວິທີນີ້ເພິ່ນໄດນໍາອິດສະຣາເອນໃຫ້ເຮັດບາບດ້ວຍ[53]ເພິ່ນໄດ້ຮັບໃຊ້ພະບາອານ ແລະໄດ້ນະມັດສະການພະນັ້ນ
ແລະເຮັດໃຫ້ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນໄດ້ໂກດຮ້າຍ ໂດຍເຮັດຕາມທຸກຢ່າງທີ່ພໍ່ຂອງເພິ່ນໄດ້ເຮັດໄວ້ແລ້ວນັ້ນ

# 2 ກະສັດ

1 [1]ໂມອາບກໍໄດ້ກະບົດຕໍ່ອິສະຣາເອນ ພາຍຫລັງຈາກອາຮາບໄດ້ຕາຍໄປ.[2]ແລ້ວອາຮາຊີຢາ
ໄດ້ຕົກລົງຈາກລະບຽງວັງທີ່ຫ້ອງຊັ້ນເທິງຂອງຂອງພະອົງໃນກຸງຊາມາເຣຍ, ແລະຊົງບາດເຈັບ.
ດັ່ງນັ້ນພະອົງຈຶ່ງໄດ້ໃຊ້ບັນດາຜູ້ສື່ງຂ່າວສານໄປແລະໄດ້ຊົງບອກກັບພວກເຂົາວ່າ," ຈົ່ງໄປຖາມບາອານເຊບຸບ, ພະເຈົ້າແຫ່ງເອກໂຣນ,
ວ່າເຮົາຈະດີຈາກການບາດເຈັບນີ້ຫລືບໍ່?"

[3]ແຕ່ທູດສະຫວັນຂອງພຣະຢາເວ ໄດ້ເວົ້າກັບ ເອລີຢາຊາວຕີຊະເບວ່າ,"ຈົ່ງລຸກຂຶ້ນ, ໄປພົບບັນດາຜູ້ສື່ງຂ່າວສານຂອງກະສັດແຫ່ງຊາມາເຣຍ,
ແລະຈົ່ງເວົ້າກັບພວກເຂົາວ່າ,' ເພາະບໍ່ມີພຣະເຈົ້າໃນອິສະຣາເອນແລ້ວບໍ ພວກເຈົ້າຈຶ່ງໄປປຶກສາພະເຈົ້າບາອານເຊບຸບ, ພະເຈົ້າແຫ່ງເອກໂຣນ?
[4]ເພາະສະນັ້ນພຣະຢາເວກ່າວດັ່ງນີ້," ເຈົ້າຈະບໍ່ໄດ້ລຸກຂຶ້ນຈາກທີ່ນອນຂອງເຈົ້າ; ແຕ່ເຈົ້າຈະຕ້ອງຕາຍແນ່."'"ແລ້ວເອລີຢາກໍໄດ້ໄປ.
[5]ເມື່ອຜູ້ສື່ງຂ່າວສານນັ້ນໄດ້ກັບມາເຝົ້າອາຮາຊີຢາ, ພະອົງໄດ້ຖາມພວກເຂົາວ່າ,"
ເປັນຫຍັງພວກເຈົ້າຈຶ່ງພາກັນກັບມາ?"[6]ພວກເຂົາໄດ້ຕອບພະອົງວ່າ," ມີຊາຍຄົນຫນຶ່ງຂຶ້ນມາພົບກັບພວກຂ້ານ້ອຍ
ແລະໄດ້ເວົ້າກັບພວກຂ້ານ້ອຍວ່າ, 'ຈົ່ງກັບໄປເຝົ້າກະສັດຜູ້ຊົງໃຊ້ພວກເຈົ້າມາ, ແລະຖາມພະອົງວ່າ, "ພຣະຢາເວກ່າວດັ່ງນີ້ວ່າ:
ເພາະບໍ່ມີພຣະເຈົ້າໃນອິສະຣາເອນແລ້ວບໍ ເຈົ້າຈຶ່ງໃຊ້ຄົນໄປປຶກສາບາອານເຊບຸບ, ພະເຈົ້າແຫ່ງເອກໂຣນ? ເພາະສະນັ້ນເຈົ້າຈະບໍ່ໄດ້ລຸກຂຶ້ນ;
ຈາກທີ່ນອນຂອງເຈົ້າ, ແຕ່ເຈົ້າເຈົ້າຈະຕາຍ.'"'"
[7]ອາຮາຊີຢາໄດ້ຖາມຜູ້ສື່ງຂ່າວສານ, ຂອງພະອົງວ່າ, "ຄົນທີ່ຂຶ້ນມາພົບເຈົ້າ
ແລະບອກສິ່ງເລົ່ານີ້ແກ່ເຈົ້ານັ້ນມີລັກສະນະແນວໃດ?"[8]ພວກເຂົາໄດ້ຕອບພະອົງວ່າ,
"ເພິ່ນໄດ້ສວມເສື້ອຜ້າທີ່ເຮັດດ້ວຍຂົນສັດແລະມີສາຍຫນັງຄາດແອວຂອງເພິ່ນ. "ດັ່ງນັ້ນກະສັດໄດ້ກ່າວວ່າ," ນັ້ນຄືເອລີຢາຊາວຕີຊະເບ."

 generated on Tue Jun 17 19:01:42 2025

[9]ແລ້ວກະສັດກໍໄດ້ຊົງຮັບສັ່ງ ໃຫ້ນາຍກອງກັບທະຫານຫ້າສິບຄົນໄປຫາເອລີຢາ.
ນາຍກອງໄດ້ຂຶ້ນໄປຫາເອລີຢາຊຶ່ງເພິ່ນກຳລັງນັ່ງຢູ່ເທິງຍອດເຂົາ. ນາຍກອງໄດ້ກ່າວແກ່ເພິ່ນວ່າ,"ທ່ານ, ຄົນຂອງພຣະເຈົ້າ,
ກະສັດໄດ້ບອກດັ່ງນີ້ວ່າ,' ຈົ່ງລົງມາ.'"[10]ແຕ່ເອລີຢາໄດ້ຕອບນາຍກອງແລະໄດ້ເວົ້າວ່າ,"ຖ້າເຮົາເປັນຄົນຂອງພຣະເຈົ້າ,
ກໍຂໍໃຫ້ໄຟລົງມາຈາກທ້ອງຟ້າເຜົາຜານເຈົ້າແລະຄົນທັງຫ້າສິບຄົນຂອງເຈົ້າເຖີດ," ແລ້ວໄຟກໍໄດ້ລົງມາຈາກທ້ອງຟ້າ
ແລ້ວໄຟກໍໄດ້ເຜົາຜານເຂົາກັບຄົນທັງຫ້າສິບຄົນຂອງເຂົາ.
[11]ແລ້ວກະສັດອາຮາຊີຢາໄດ້ຮັບສັ່ງໃຫ້ນາຍກອງອີກຄົນຫນຶ່ງ ກັບທະຫານອີກຫ້າສິບນາຍຂອງເຂົາໄປຫາເອລີຢາ.
ນາຍກອງຄົນນີ້ກໍໄດ້ກາ່ວແກ່ເອລີຢາວ່າ," ທ່ານ, ຄົນຂອງພຣະເຈົ້າເອີຍ, ກະສັດກ່າວດັ່ງນີ້ວ່າ,"
ຈົ່ງລົງມາດຽວນີ້.'"[12]ເອລີຢາໄດ້ຕອບແລະເວົ້າວ່າ," ຖ້າເຮົາເປັນຄົນຂອງພຣະເຈົ້າ,
ກໍຂໍໃຫ້ໄຟລົງມາຈາກທ້ອງຟ້າເຜົາຜານເຈົ້າແລະຄົນທັງຫ້າສິບຂອງເຈົ້າເຖີດ."ແລ້ວໄຟຂອງພຣະເຈົ້າໄດ້ລົງມາຈາກທ້ອງຟ້າ
ແລະໄດ້ເຜົາຜານເຂົາກັບຄົນທັງຫ້າສິບຂອງເຂົາອີກ.
[13]ອີກຄັ້ງຫນຶ່ງກະສັດຍັງໄດ້ຮັບສັ່ງໃຫ້ນາຍທະຫານກຸ່ມທີສາມ ພ້ອມດ້ວຍນາຍທະຫານຫ້າສິບຄົນຂອງເຂົາ. ນາຍກອງຄົນນີ້ກໍໄດ້ຂຶ້ນໄປ,
ໄດ້ຄຸເຂົ່າຕໍ່ຫນ້າເອຊາຢາ, ແລະໄດ້ອ້ອນວອນແລະໄດ້ເວົ້າກັບເຂົາວ່າ,"ທ່ານ, ຄົນຂອງພຣະເຈົ້າ, ຂ້ານ້ອຍຂໍຮ້ອງທ່ານ,
ຂໍໃຫ້ຊີວິດຂອງຂ້ານ້ອຍແລະຊີວິດຂອງຜູ້ຮັບໃຊ້ຂອງທ່ານຫ້າສິບຄົນນີ້ເປັນສິ່ງທີ່ມີຄ່າໃນສາຍຕາຂອງທ່ານ.[14]ແທ້ຈິງແລ້ວ,
ໄຟໄດ້ລົງມາຈາກທ້ອງຟ້າແລະໄດ້ເຜົາຜານນາຍທະຫານສອງຄົນທຳອິດພ້ອມທັງທະຫານຂອງເຂົາທີ່ມາກ່ອນ,
ແຕ່ບັດນີ້ຂໍໃຫ້ຊີວິດຂອງຂ້ານ້ອຍເປັນສິ່ງທີ່ມີຄ່າໃນສາຍຕາຂອງທ່ານດ້ວຍເຖີດ."
[15]ແລ້ວທູດສະຫວັນຂອງພຣະຢາເວໄດ້ກ່າວແກ່ເອລີຢາວ່າ," ຈົ່ງລົງໄປກັບເຂົາເຖີດ ຢ່າຢ້ານເຂົາເລີຍ." ດັ່ງນັ້ນເອລີຢາກໍໄດ້ລຸກຂຶ້ນ
ແລະລົງໄປກັບພວກເຂົາເພື່ອເຂົ້າເຝົ້າກະສັດ.[16]ຕໍ່ມາເອລີຢາໄດ້ບອກອາຮາຊີຢາວ່າ," ນີ້ຄືເຫດທີ່ພຣະຢາເວກ່າວວ່າ,
'ເພາະເຈົ້າໄດ້ສົ່ງຜູ້ສົ່ງຂ່າວສານໄປປຶກສາ ເບເອນເຊບຸບ, ພະເຈົ້າແຫ່ງເອກໂຣນ. ເພາະບໍ່ມີພຣະເຈົ້າໃນອິສະຣາເອນໃຫ້ທູນຖາມຢ່າງນັ້ນບໍ?
ດັ່ງນັ້ນ, ບັດນີ້ເຈົ້າຈະບໍ່ໄດ້ລຸກຂຶ້ນຈາກທີ່ນອນ; ແຕ່ເຈົ້າຈະຕ້ອງຕາຍແນ່.'"
[17]ດັ່ງນັ້ນ ກະສັດ ອາຮາຊີຢາໄດ້ຕາຍໄປຕາມຖ້ອຍຄຳຂອງພຣະຢາເວ ຊຶ່ງເອລີຢາໄດ້ກ່າວໄວ້ນັ້ນ ໂຢຣາມໄດ້ຊົງຂຶ້ນປົກຄອງແທນ,
ໃນປີທີສອງແຫ່ງຣາຊການເຢໂຮຣາມລູກຊາຍຂອງເຢໂຮຊາຟັດກະສັດແຫ່ງຢູດາ, ເພາະອາຮາຢາບໍ່ມີລູກ.
[18]ສ່ວນວຽກອື່ນໆຂອງອາຮາຢາບໍ່ໄດ້ບັນທຶກໄວ້ໃນຫນັງສືປະຫວັດສາດຂອງກະສັດອິສະຣາເອນບໍ?

2 1ດັ່ງນັ້ນ, ເຫດການໄດ້ບັງເກີດຂຶ້ນ, ເມື່ອພຣະຢາເວ ກຳລັງຈະຮັບເອົາເອລີຢາເຂົ້າໄປໃນທ້ອງຟ້າດ້ວຍພາຍຸຫມຸນ,
ເອລີຢາໄດ້ອອກເດີນທາງກັບເອລີຊາຈາກເມືອງກິເລອາດ. 2ເອລີຢາເວົ້າກັບເອລີຊາວ່າ,“ ຈົ່ງຖ້າຢູ່ທີ່ນີ້ເຖີດ,
ເພາະວ່າພຣະຢາເວໄດ້ສົ່ງຂ້າພະເຈົ້າໄປທີ່ເບັດເອນ.” ເອລີຊາໄດ້ຕອບວ່າ, "ພຣະຢາເວຜູ້ຊົງພຣະຊົນຢູ່, ແລະ ເມື່ອທ່ານມີຊີວິດຢູ່,
ຂ້າພະເຈົ້າຈະບໍ່ໄປຈາກທ່ານສັນນັ້ນ." ດັ່ງນັ້ນເຂົາທັງສອງຈຶ່ງລົງໄປທີ່ເບັດເອນ.

3ບັນດາບຸດຊາຍຂອງຜູ້ທຳນວາຍ ຜູ້ທີ່ຢູ່ເບດເອນໄດ້ມາຫາເອລີຊາ ແລະ ຖາມລາວວ່າ,
"ທ່ານຮູ້ບໍ່ວ່າພຣະຢາເວຈະຊົງຮັບເອົານາຍຂອງທ່ານໄປຈາກທ່ານໃນມື້ນີ້?" ເອລີຊາ ຕອບວ່າ, "ແມ່ນແລ້ວ, ຂ້າພະເຈົ້າຮູ້ແລ້ວ,
ແຕ່ຢ່າເວົ້າເລື່ອງນີ້."4ເອລີຢາກ່າວກັບລາວວ່າ, "ເອລີຊາ, ຈົ່ງລໍຖ້າຢູ່ບ່ອນນີ້ເຖີດ, ເພາະວ່າພຣະຢາເວໄດ້ສົ່ງຂ້າພະເຈົ້າໄປເມືອງເຢຣິໂກ."
ຫລັງຈາກນັ້ນເອລີຊາໄດ້ຕອບວ່າ, "ພຣະຢາເວຊົງພຣະຊົນຢູ່, ແລະ ໃນຂະນະທີ່ທ່ານມີຊີວິດຢູ່, ຂ້າພະເຈົ້າຈະບໍ່ຈາກທ່ານໄປ."
ດັ່ງນັ້ນພວກເຂົາເຈົ້າຈຶ່ງໄປເມືອງເຢຣິໂກ.
5ບັນດາບຸດຊາຍຂອງຜູ້ທຳນວາຍຜູ້ ທີ່ຢູ່ໃນເມືອງ ເຢຣິໂກ ໄດ້ເຂົ້າມາຫາເອລີຊາ ແລະ ໄດ້ເວົ້າກັບລາວວ່າ, "ເຈົ້າຮູ້ບໍ່ວ່າພຣະຢາເວ
ຈະເອົາເຈົ້ານາຍຂອງທ່ານອອກໄປຈາກທ່ານໃນມື້ນີ້?" ເອລີຊາໄດ້ຕອບວ່າ, "ແມ່ນແລ້ວ, ຂ້າພະເຈົ້າຮູ້,
ແຕ່ຢ່າເວົ້າເຖິງບັນຫານີ້."6ແລ້ວເອລີຢາໄດ້ກ່າວກັບລາວວ່າ,“ ຈົ່ງລໍຖ້າຢູ່ບ່ອນນີ້ເຖີດ, ກະຣຸນາ, ເພາະວ່າພຣະຢາເວ
ໄດ້ສົ່ງຂ້າພະເຈົ້າໄປແມ່ນ້ຳຈໍແດນ.” ເອລີຊາໄດ້ຕອບວ່າ, "ພຣະຢາເວຊົງພຣະຊົນຢູ່, ແລະ ໃນຂະນະທີ່ທ່ານມີຊີວິດຢູ່,
ຂ້າພະເຈົ້າຈະບໍ່ຈາກທ່ານໄປ." ດັ່ງນັ້ນພວກເຂົາເຈົ້າທັງສອງຈຶ່ງໄດ້ເດີນຕໍ່ໄປ.
7ໃນຕໍ່ມາ, ມີບັນດາບຸດຊາຍຂອງຜູ້ທຳນວາຍ
ຈຳນວນຫ້າສິບຄົນໄດ້ຢືນຢູ່ກົງກັນຂ້ວາມກັບພວກເຂົາທີ່ຢູ່ໄກອອກໄປສ່ວນເຂົາທັງສອງຄົນຢືນຢູ່ຂ້າງແມ່ນ້ຳຈໍແດນ.8ເອລີຢາໄດ້ເອົາເສື້ອຄຸມ,
ຂອງທ່ານມ້ວນເຂົ້າ, ແລະ ຟາດລົງໃນນ້ຳນັ້ນ. ແມ່ນ້ຳກໍໄດ້ແຍກອອກເປັນສອງຂ້າງເພື່ອໃຫ້ພວກເຂົາທັງສອງຍ່າງຂ້ວາມໄປເທິງດິນແຫ້ງ.
9ແລ້ວສິ່ງນີ້ກໍເກີດຂຶ້ນ, ຫລັງຈາກພວກເຂົາຂ້ວາມໄປ, ເອລີຢາໄດ້ເວົ້າກັບເອລີຊາວ່າ, "ຈົ່ງຂໍຂ້າພະເຈົ້າເຖີດ
ວ່າທ່ານຢາກໃຫ້ເຮົາເຮັດສິ່ງໃດເພື່ອທ່ານ ກ່ອນທີ່ຂ້າພະເຈົ້າຈະຖືກຮັບເອົາໄປຈາກທ່ານ." ເອລີຊາໄດ້ຕອບວ່າ,
"ຂໍໃຫ້ຈິດວິນຍານຂອງທ່ານສອງເທົ່າ ມາຢູ່ນຳຂ້າພະເຈົ້າ."10ເອລີຢາຕອບວ່າ, "ທ່ານໄດ້ຂໍສິ່ງທີ່ຍາກ. ເຖິງຢ່າງໃດກໍຕາມ,
ຖ້າທ່ານເຫັນຂ້າພະເຈົ້າຖືກຮັບເອົາໄປຈາກທ່ານ, ສິ່ງນີ້ຈະເກີດຂຶ້ນກັບທ່ານ, ແຕ່ຖ້າທ່ານບໍ່ເຫັນ, ທ່ານກໍຈະບໍ່ໄດ້."
11ໃນຂະນະທີ່ພວກເຂົາຍ່າງໄປ ແລະສົນທະນາກັນ, ມີຣົດມ້າຮົບໄຟຄັນຫນຶ່ງ ແລະ ພວກມ້າໄຟໄດ້ປະກົດຂຶ້ນ,
ໄດ້ແຍກເຂົາທັງສອງອອກຈາກກັນ, ແລະ ເອລີຢາໄດ້ຂຶ້ນໄປເທິງຟ້າໂດຍພາຍຸຫມູນ.12ເອລີຊາໄດ້ເຫັນ ແລະ ຮ້ອງຂຶ້ນວ່າ, "ພໍ່ຂອງຂ້າພະເຈົ້າ,
ພໍ່ຂອງຂ້າພະເຈົ້າ, ລົດມ້າເສິກຂອງອິສະຣາເອນ ແລະ ທະຫານມ້າຂອງພວກເຂົາ!" ລາວບໍ່ເຫັນເອລີຢາອີກຕໍ່ໄປ, ແລະ
ລາວໄດ້ຈັບເສື້ອຜ້າຂອງຕົນເອງ, ແລະ ໄດ້ຈີກອອກເປັນສອງສ່ວນ.
13ເອລີຊາໄດ້ເອົາເສື້ອຄຸມຂອງເອລີຢາທີ່ຕົກລົງມາ ແລະໄດ້ກັບໄປຢືນຢູ່ແຄມຝັ່ງແມ່ນ້ຳຈໍແດນ.
14ທ່ານໄດ້ເອົາເສື້ອຄຸມຂອງເອລີຢາທີ່ຕົກລົງມາຟາດໃສ່ນ້ຳ ແລະໄດ້ກ່າວວ່າ, "ພຣະຢາເວພຣະເຈົ້າຂອງເອລີຢາສະຖິດຢູ່ແຫ່ງໃດ?"
ເມື່ອເຂົາໄດ້ຟາດລົງນ້ຳ, ນ້ຳກໍໄດ້ແຍກອອກເປັນສອງຂ້າງ ແລະເອລີຊາໄດ້ຍ່າງຂ້ວາມໄປ.
15ເມື່ອບັນດາບຸດຊາຍຂອງຜູ້ທຳນວາຍຜູ້ທີ່ມາຈາກເມືອງເຢຣິໂກ ໄດ້ເຫັນລາວຢູ່ຕໍ່ຫນ້າພວກເຂົາ, ພວກເຂົາເວົ້າວ່າ,
"ວິນຍານຂອງເອລີຢານອນຢູ່ເທິງເອລີຊາ!" ດັ່ງນັ້ນພວກເຂົາຈຶ່ງມາພົບເພິ່ນ, ແລະ ກົ້ມຕົວລົງຕໍ່ຫນ້າເພິ່ນ.16ພວກເຂົາເວົ້າກັບເພິ່ນວ່າ,“ບັດນີ້,
ໃນບັນດາຜູ້ຮັບໃຊ້ຂອງທ່ານມີຄົນແຂງແຮງຫ້າສິບຄົນ. ພວກຂ້າພະເຈົ້າຂໍໃຫ້ພວກເຂົາເຂົ້າໄປຊອກຫາເຈົ້ານາຍຂອງທ່ານ,
ບາງທີພຣະວິນຍານຂອງພຣະຢາເວໄດ້ຮັບທ່ານໄປແລ້ວຍົກລາວຂຶ້ນ ແລະ ໂຍນລາວລົງເທິງພູບາງຫນ່ວຍ ຫລື ບາງຮ່ອມພູ. "ເອລີຊາຕອບວ່າ“
ຢ່າ, ຢ່າສົ່ງພວກເຂົາເຂົ້າໄປເລີຍ.”
17ແຕ່ເມື່ອພວກເຂົາຮຽກຮ້ອງເອລີຊາຈົນລາວຮູ້ສຶກລະອາຍ, ແລ້ວລາວເວົ້າວ່າ, "ສົ່ງພວກເຂົາເຂົ້າໄປເຖີດ."
ຈາກນັ້ນພວກເຂົາໄດ້ສົ່ງຫ້າສິບຄົນໄປ, ແລະພວກເຂົາຊອກຫາເປັນເວລາສາມວັນ, ແຕ່ບໍ່ພົບເພິ່ນ.18ພວກເຂົາກໍໄດ້ກັບມາຫາເອລີຊາ,
ໃນຂະນະທີ່ເພິ່ນພັກຢູ່ເມືອງເຢຣິໂກ, ແລະເພິ່ນໄດ້ກ່າວກັບພວກເຂົາວ່າ, "ຂ້າພະເຈົ້າໄດ້ບອກທ່ານແລ້ວບໍ່ແມ່ນບໍ,'ຢ່າໄປເລີຍ'?"
19ບັນດາຜູ້ຊາຍໃນເມືອງນັ້ນໄດ້ເວົ້າກັບເອລີຊາວ່າ, "ເບິ່ງແມ, ພວກຂ້າພະເຈົ້າຂໍຮ້ອງທ່ານ, ສະພາບແວດລ້ອມຂອງເມືອງນີ້ຮົ່ມເຢັນດີ,
ດັ່ງທີ່ເຈົ້ານາຍຂອງຂ້າພະເຈົ້າໄດ້ເຫັນ, ແຕ່ວ່ານ້ຳບໍ່ດີ ແລະແຜ່ນດິນບໍ່ໄດ້ຮັບ ຫມາກຜົນ."20ເອລີຊາໄດ້ເວົ້າວ່າ,“
ຈົ່ງເອົາຊາມໃຫມ່ມາໃຫ້ຂ້າພະເຈົ້າ ແລະເອົາເກືອໃສ່ໃນນັ້ນ”, ດັ່ງນັ້ນພວກເຂົາຈຶ່ງເອົາມາໃຫ້ເພິ່ນ.
21ເອລີຊາໄດ້ອອກໄປທີ່ນ້ຳພຸ ແລະ ເອົາເກືອລົງໃສ່ນ້ຳ; ແລະ ໄດ້ກ່າວວ່າ, ”ພຣະຢາເວໄດ້ກ່າວດັ່ງນີ້ວ່າ, 'ເຮົາໄດ້ເຮັດນ້ຳນີ້ໃຫ້ດີແລ້ວ
ນັບຈາກເວລານີ້ເປັນຕົ້ນໄປ, ຈະບໍ່ມີຄວາມຕາຍ ຫລືແຜ່ນດິນທີ່ບໍ່ເກີດຜົນຫຍັງ.'”22ດັ່ງນັ້ນ ນ້ຳຈຶ່ງດີມາຮອດທຸກມື້ນີ້,
ຕາມຖ້ອຍຄຳທີ່ເອລີຊາໄດ້ກ່າວນັ້ນ.
23ຈາກນັ້ນເອລີຊາກໍຂຶ້ນຈາກບ່ອນນັ້ນໄປທີ່ເບັດເອັນ. ໃນຂະນະທີ່ເພິ່ນກຳລັງຂຶ້ນໄປຕາມທາງ,
ມີພວກເດັກຊາຍຫນຸ່ມໄດ້ອອກມາຈາກເມືອງແລະເຢາະເຢີ້ຍເພິ່ນວ່າ; ພວກເຂົາເວົ້າກັບເພິ່ນວ່າ, "ໄປໃຫ້ພົ້ນເຈົ້າຫົວລ້ານ!
ໄປໃຫ້ພົ້ນເຈົ້າຫົວລ້ານ!"24ເອລີເຊໄດ້ຫລຽວຄືນຫລັງ ແລະເຫັນພວກເຂົາ; ເພິ່ນຈຶ່ງໄດ້ສາບແຊ່ງພວກເຂົາໃນນາມຊື່ຂອງພະຢາເວ.
ຫລັງຈາກນັ້ນມີຫມີແມ່ສອງໂຕໄດ້ອອກມາຈາກປ່າ ແລະໄດ້ທຳຮ້າຍເດັກຊາຍສີ່ສິບສອງຄົນຈົນໄດ້ຮັບບາດເຈັບ.
25ຈາກນັ້ນເອລີຊາໄດ້ເດີນທາງຈາກນັ້ນໄປຍັງພູເຂົາກາເມນ, ແລະຈາກນັ້ນເພິ່ນໄດ້ກັບໄປເມືອງຊາມາເຣຍ.

3 1ປັດຈຸບັນ ໃນປີທີສິບແປດຂອງຣາຊການຂອງເຢໂຮຊາຟັດກະສັດແຫ່ງຢູດາ,
ໂຢຣາມລູກຊາຍຂອງອາຮາບໄດ້ເລີ່ມຕົ້ນປົກຄອງອິສະຣາເອນໃນເມືອງຊາມາເຣຍ; ພະອົງໄດ້ປົກຄອງເມືອງສິບສອງປີ.
2ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ, ແຕ່ພະອົງບໍ່ຄືກັບພໍ່ ແລະ ແມ່ຂອງພະອົງ;
ເພາະພະອົງເອົາເສົາຫີນອັນສັກສິດຂອງພະບາອານທີ່ພໍ່ຂອງພະອົງສ້າງໄວ້ອອກ.3ເຖິງຢ່າງໃດກໍຕາມ,
ພະອົງຍັງຄົງຢຶດຕິດຢູ່ກັບບາບຂອງເຢໂຣໂບອາມ ລູກຊາຍຂອງເນບັດ, ຜູ້ທີ່ເປັນສາເຫດເຮັດໃຫ້ອິສະຣາເອນເຮັດບາບ;
ພະອົງບໍ່ໄດ້ຫັນຫນີຈາກບາບນັ້ນ.

4ປັດຈຸບັນນີ້ກະສັດເມຊາກ ຂອງໂມອາບໄດ້ຊົງເປັນຜູ້ເພາະພັນແກະ. ພະອົງຕ້ອງຖວາຍລູກແກະ 100,000 ໂຕ ແລະ ຂົນແກະໂຕຜູ້ 100,000
ຜືນແກ່ກະສັດອິສະຣາເອນ.5ແຕ່ຫລັງຈາກອາຮາບໄດ້ເສຍຊີວິດແລ້ວ, ກະສັດໂມອາບໄດ້ກະບົດຕໍ່ກະສັດອິສະຣາເອນ.6ດັ່ງນັ້ນ
ກະສັດໂຢຣາມໄດ້ອອກຈາກເມືອງຊາມາເຣຍເພື່ອເຕົ້າໂຮມຄົນອິສະຣາເອນທັງຫມົດໃນການສູ້ຮົບ.
7ເພິ່ນໄດ້ສົ່ງສານໄປຫາກະສັດເຢໂຮຊາຟັດກະສັດແຫ່ງຢູດາ, ກ່າວວ່າ, "ກະສັດໂມອາບໄດ້ກະບົດຕໍ່ຂ້າພະເຈົ້າ.
ທ່ານຈະໄປສູ້ຮົບກັບໂມອາບພ້ອມກັບຂ້າພະເຈົ້າຫລືບໍ່?" ເຢໂຮຊາຟັດຕອບວ່າ, "ຂ້າພະເຈົ້າຈະໄປ. ຂ້າພະເຈົ້າກໍເປັນຄືກັນກັບທ່ານ,
ປະຊາຊົນຂອງຂ້າພະເຈົ້າກໍຄືກັບປະຊາຊົນຂອງທ່ານ, ມ້າຂອງຂ້າພະເຈົ້າຄືກັບມ້າຂອງທ່ານ."8ແລ້ວເພິ່ນກໍໄດ້ກ່າວວ່າ,
"ພວກເຮົາຄວນໂຈມຕີໂດຍວິທີໃດ?" ເຢໂຮຊາຟັດຕອບວ່າ, "ໂດຍທາງຖິ່ນທຸຣະກັນດານຂອງເອໂດມ."
9ດັ່ງນັ້ນ ກະສັດຂອງອິສະຣາເອນຈຶ່ງໄດ້ຍົກທັບໄປພ້ອມກັບກະສັດແຫ່ງຢູດາ ແລະ ກະສັດແຫ່ງເອໂດມ
ແລະເມື່ອທັງສາມກະສັດຍົກທັບໄປອ້ອມເປັນເວລາເຈັດວັນແລ້ວ. ກໍໄດ້ຫານ້ຳໃຫ້ກອງທັບຫລືໃຫ້ມ້າທັງຫລາຍຂອງພວກເຂົາ
ຫລືເຫລົ່າສັດຕ່າງໆ ທີ່ມາດ້ວຍບໍ່ໄດ້.10ດັ່ງນັ້ນກະສັດແຫ່ງອິສະຣາເອນຈຶ່ງໄດ້ກ່າວວ່າ, "ອະນິຈາເອີຍ?
ພຣະຢາເວໄດ້ເອີ້ນຫາສາມກະສັດມາເພື່ອຈະມອບໄວ້ໃນມືຂອງໂມອາບຫລື?
11ແຕ່ເຢໂຮຊາຟັດໄດ້ກ່າວວ່າ, "ຢູ່ແຫ່ງນີ້ບໍ່ມີຜູ້ທຳນວາຍຂອງພຣະຢາເວ, ເພື່ອພວກເຮົາຈະໄດ້ໃຫ້ທ່ານໄປປຶກສາພຣະຢາເວ?"
ແລ້ວນາຍທະຫານຄົນຫນຶ່ງ ຂອງກະສັດອິສະຣາເອນໄດ້ຕອບ ແລະກ່າວວ່າ, "ເອລີຊາລູກຊາຍຂອງຊາຟັດຢູ່ທີ່ນີ້,
ຜູ້ທີ່ເທນ້ຳໃສ່ມືຂອງເອລີຢາ."12ເຢໂຮຊາຟັດໄດ້ກ່າວວ່າ, "ພຣະຄຳຂອງພຣະຢາເວແມ່ນຢູ່ກັບເພິ່ນ." ດັ່ງນັ້ນກະສັດແຫ່ງອິສະຣາເອນ,
ເຢໂຮຊາຟັດ, ແລະ ກະສັດເອໂດມຈຶ່ງໄດ້ລົງໄປຫາເພິ່ນ.
13ເອລີຊາໄດ້ຖາມກະສັດອິສະລາເອນວ່າ, "ຂ້າພະເຈົ້າມີຫຍັງທີ່ກ່ຽວຂ້ອງກັບພະອົງບໍ? ຂໍຈົ່ງໄປຫາຜູ້ທຳນວາຍຂອງພໍ່ແລະແມ່ຂອງພະອົງເຖີດ."
ດັ່ງນັ້ນກະສັດອິສະຣາເອນຈຶ່ງກ່າວກັບທ່ານວ່າ, "ບໍ່ໄປ, ເພາະວ່າພຣະຢາເວ
ໄດ້ເອີ້ນບັນດາກະສັດທັງສາມນີ້ມາເພື່ອມອບໄວ້ໃນມືຂອງໂມອາບ."14ເອລີຊາໄດ້ກ່າວວ່າ, “ ພຣະຢາເວຜູ້ຊົງເປັນຈອມໂຍທາ ຜູ້ຊົງພຣະຊົນຢູ່,
ຜູ້ເຊິ່ງຂ້າພະເຈົ້າໄດ້ຢືນຢູ່ຕໍ່ຫນ້າພຣະອົງ, ແນ່ນອນວ່າ ຖ້າຂ້າພະເຈົ້າບໍ່ໄດ້ໃຫ້ການເຄົາຣົບນັບຖືແກ່ກະສັດເຢໂຮຊາຟັດກະສັດແຫ່ງຢູດາ,
ຂ້າພະເຈົ້າຈະບໍ່ໃຈຈົດຈໍ່ຢູ່ກັບພະອົງເລີຍ.
15ແຕ່ບັດນີ້ຂໍຈົ່ງນຳເອົານັກດົນຕີມາໃຫ້ຂ້າພະເຈົ້າຈັກຄົນຫນຶ່ງ." ຕໍ່ມາສິ່ງນີ້ກໍໄດ້ເກີດຂຶ້ນເມື່ອນັກຫລິ້ນພິນໄດ້ຫລິ້ນແລ້ວ,
ພຣະຫັດຂອງພຣະຢາເວກໍໄດ້ມາເຫນືອເອລີຊາ.16ທ່ານໄດ້ກ່າວວ່າ, "ພຣະຢາເວໄດ້ກ່າວດັ່ງນີ້,
"ຈົ່ງເຮັດໃຫ້ຮ່ອມພູນີ້ເຕັມໄປດ້ວຍສາຍນ້ຳ."17ເພາະພຣະຢາເວກ່າວດັ່ງນີ້, 'ທ່ານທັງຫລາຍຈະບໍ່ເຫັນລົມຫລືຝົນ,
ແຕ່ວ່າຮ່ອມພູນັ້ນຈະເຕັມໄປດ້ວຍແມ່ນ້ຳ, ແລະ ທ່ານຈະດື່ມນ້ຳ, ທັງຕົວທ່ານເອງ ແລະ ຝູງສັດຂອງທ່ານ ແລະ ສັດໃຊ້ວຽກທັງຫມົດຂອງທ່ານ.'
18ເລື່ອງນີ້ເປັນເລື່ອງງ່າຍໃນສາຍພຣະເນດຂອງພຣະຢາເວ. ພຣະອົງຈະໄດ້ມອບຊັຍຊະນະເຫນືອຊາວໂມອາບໃຫ້ແກ່ທ່ານ.
19ພວກທ່ານຈະໂຈມຕີເມືອງທີ່ມີປ້ອມກຳລັງທຸກເມືອງ ແລະ ເມືອງຫລັກທຸກເມືອງ, ໂຄ່ນຕົ້ນໄມ້ທີ່ດີທຸກຕົ້ນ, ຕັນບໍ່ນ້ຳພຸທຸກແຫ່ງ ແລະ
ທຳລາຍໄຮ່ນາທີ່ດີທຸກແຫ່ງໃຫ້ເສຍຫາຍດ້ວຍຫີນ.”
20ດັ່ງນັ້ນ ໃນຕອນເຊົ້າປະມານເວລາຖວາຍເຄື່ອງບູຊາ, ມີນ້ຳມາທາງເມືອງເອໂດມ; ຈົນແຜ່ນດິນເຕັມໄປດ້ວຍນ້ຳ.
21ບັດນີ້ ເມື່ອຊາວໂມອາບທັງຫມົດໄດ້ຍິນວ່າບັນດາກະສັດໄດ້ມາສູ້ຮົບກັບພວກເຂົາ, ພວກເຂົາໄດ້ເຕົ້າໂຮມກັນ,
ທຸກຄົນທີ່ສາມາດໃສ່ເສື້ອປ້ອງກັນອາວຸດໄດ້, ແລະພວກເຂົາກໍໄດ້ໄປຕັ້ງຮັບທີ່ຊາຍແດນ.22ພວກເຂົາໄດ້ຕື່ນແຕ່ເຊົ້າ
ແລະດວງຕາເວັນໄດ້ສ່ອງແສງຢູ່ເທິງຫນ້ານ້ຳ. ເມື່ອຊາວໂມອາບໄດ້ເຫັນນ້ຳທີ່ຢູ່ກົງກັນຂ້ວາມກັບພວກເຂົາ, ສີນັ້ນເປັນສີແດງຄ້າຍຄືເລືອດ.
23ພວກເຂົາໄດ້ອຸທານອອກມາວ່າ, "ນີ້ແມ່ນເລືອດ! ບັນດາກະສັດໄດ້ສູ້ຮົບກັນແທ້ໆ, ແລະພວກເຂົາໄດ້ຂ້າກັນເອງ! ດັ່ງນັ້ນບັດນີ້, ໂມອາບເອີຍ,
ຈົ່ງມາຮິບເອົາເຄື່ອງຂອງພວກເຂົາໄປເຖີດ!"
24ເມື່ອພວກເຂົາມາເຖິງຄ້າຍອິດສະຣາເອນ, ຄົນອິສະຣາເອນໄດ້ປະຫລາດໃຈແລະໄດ້ຕໍ່ສູ້ກັບຊາວໂມອາບ,
ຈົນພວກເຂົາທັງຫລາຍຫນີໄປຕໍ່ຫນ້າພວກເຂົາ. ກອງທັບອິສະຣາເອນໄດ້ຂັບໄລ່ຊາວໂມອາບເຂົ້າໄປໃນແຜ່ນດິນ, ແລະຂ້າຟັນພວກເຂົາ.
25ພວກເຂົາທຳລາຍເມືອງຕ່າງໆແລະທຸກຄົນໄດ້ໂຍນຫີນເຂົ້າໄປໃນໄຮ່ນາທີ່ດີທຸກແຫ່ງ. ພວກເຂົາໄດ້ຕັນບໍ່ນ້ຳພຸທຸກແຫ່ງ
ແລະໂຄ່ນຕົ້ນໄມ້ດີໆທຸກຕົ້ນ. ເຫລືອແຕ່ເມືອງກີຣະເຮເຣັດເທົ່ານັ້ນ. ແຕ່ພວກທະຫານທີ່ປະກອບອາວຸດໄດ້ລ້ອມເມືອງໄວ້ ແລະໂຈມຕີ.
26ເມື່ອກະສັດເມຊາແຫ່ງໂມອາບເຫັນວ່າຈະສູ້ຮົບບໍ່ໄດ້, ພະອົງຈຶ່ງໄດ້ນຳບັນດາພົນດາບເຈັດຮ້ອຍຄົນຕີຝ່າອອກໄປທາງດ້ານກະສັດແຫ່ງເອໂດມ,
ແຕ່ພວກເຂົາກໍອອກມາບໍ່ໄດ້.27ແລ້ວພະອົງໄດ້ນຳເອົາລູກຊາຍກົກຂອງພະອົງ, ຜູ້ທີ່ຄວນຈະຂຶ້ນຄອງຣາດຕໍ່ຈາກພະອົງ,
ແລະໄດ້ຖວາຍລູກຊາຍເປັນເຄື່ອງບູຊາເຜົາຢູ່ເທິງກຳແພງ. ສະນັ້ນຈຶ່ງມີຄວາມຄຽດແຄ້ນຢ່າງໃຫຍ່ຫລວງຕໍ່ອິສະຣາເອນ,
ແລະກອງທັບອິສະຣາເອນຈຶ່ງໄດ້ຖອຍໄປຈາກກະສັດເມຊາ ແລະກັບໄປທີ່ດິນແດນຂອງຕົນ.

 generated on Tue Jun 17 19:01:42 2025

4 [1]ບັດນີ້ ເມຍຂອງບຸດຊາຍຂອງຜູ້ທຳນວາຍຄົນຫນຶ່ງທີ່ຜົວຂອງລາວຢູ່ໃນກຸ່ມຜູ້ທຳນວາຍໄດ້ຮ້ອງທຸກຕໍ່ເອລີຊາ, ໄດ້ກ່າວວ່າ,
"ຂ້າຮັບໃຊ້ຂອງທ່ານ ກໍຄືຜົວຂອງຂ້ານ້ອຍໄດ້ຕາຍໄປແລ້ວ, ແລະທ່ານຮູ້ຢູ່ແລ້ວວ່າ ຂ້າຮັບໃຊ້ຂອງທ່ານຢຳເກງພຣະຢາເວ.
ບັດນີ້ເຈົ້າຫນີ້ໄດ້ມາເພື່ອຈະເອົາລູກສອງຄົນຂອງຂ້ານ້ອຍໄປເປັນທາດຂອງເຂົາ."[2]ດັ່ງນັ້ນເອລີຊາຈຶ່ງໄດ້ກ່າວຕໍ່ນາງວ່າ,
"ຈະໃຫ້ຂ້ອຍເຮັດຫຍັງໃຫ້ເຈົ້າໄດ້ແດ່? ຈົ່ງບອກຂ້ອຍດ້ວຍວ່າ ເຈົ້າມີຫຍັງແດ່ຢູ່ໃນເຮືອນ?" ນາງໄດ້ກ່າວວ່າ,
"ຂ້າຮັບໃຊ້ຂອງທ່ານບໍ່ມີຫຍັງຢູ່ໃນເຮືອນນອກຈາກນ້ຳມັນແກ້ວນ້ອຍເທົ່ານັ້ນ."

[3]ແລ້ວເອລີຊາກໍໄດ້ກ່າວວ່າ, “ຈົ່ງອອກໄປຂໍຢືມແກ້ວເປົ່າຈາກເພື່ອນບ້ານ, ທຸກຄົນຂໍຢືມມາໃຫ້ໄດ້ຫລາຍທີ່ສຸດ. ເທົ່າທີ່ຈະເປັນໄປໄດ້.
[4]ແລ້ວເຈົ້າຈຶ່ງເຂົ້າບ້ານ ແລະ ປິດປະຕູຂັງຕົວເອງ ແລະລູກຊາຍໄວ້, ແລ້ວເທນ້ຳມັນໃສ່ແກ້ວເຫລົ່ານີ້ທັງຫມົດ,
ແກ້ວທີ່ເຕັມແລ້ວໃຫ້ແຍກອອກຕ່າງຫາກ."
[5]ດັ່ງນັ້ນນາງກໍໄດ້ອອກໄປຈາກເອລີຊາ ແລະໄດ້ປິດປະຕູຂັງຕົນເອງ ແລະ ລູກຊາຍຂອງນາງໄວ້. ພວກເຂົາໄດ້ເອົາແກ້ວມາໃຫ້ນາງ, ແລະ
ນາງໄດ້ເອົານ້ຳມັນໃສ່ແກ້ວເຫລົ່ານັ້ນ.[6]ເມື່ອພາຊະນະເຕັມທັງຫມົດ, ນາງຈຶ່ງໄດ້ບອກລູກຊາຍວ່າ, "ເອົາແກ້ວອີກອັນຫນຶ່ງມາໃຫ້ແມ່."
ແຕ່ເຂົາໄດ້ຕອບນາງວ່າ,“ ບໍ່ມີແກ້ວເຫລືອແລ້ວ." ແລ້ວນ້ຳມັນກໍຢຸດໄຫລ.
[7]ແລ້ວນາງກໍໄດ້ໄປ ແລະ ໄດ້ບອກໃຫ້ຄົນຂອງພຣະເຈົ້າຮູ້. ເພິ່ນໄດ້ບອກວ່າ, "ຈົ່ງໄປຂາຍນ້ຳມັນ, ແລ້ວເອົາເງິນໄປຊຳຣະຫນີ້ຂອງເຈົ້າ,
ແລະສ່ວນທີ່ເຫລືອນັ້ນ ເຈົ້າກັບລູກໆຂອງເຈົ້າ ຈົ່ງເອົາໄວ້ໃຊ້ລ້ຽງຊີວິດ."
[8]ມື້ຫນຶ່ງ ເອລີຊາໄດ້ຜ່ານໄປຍັງເມືອງຊູເນມ, ບ່ອນທີ່ແມ່ຍິງຮັ່ງມີຄົນຫນຶ່ງອາສັຍຢູ່; ນາງໄດ້ຊວນໃຫ້ເພິ່ນກິນອາຫານກັບນາງ. ດັ່ງນັ້ນ
ຫລາຍຄັ້ງເມື່ອເອລີຊາຍ່າງຜ່ານໄປທາງນັ້ນ, ລາວຈະແວ່ເຂົ້າໄປຮັບປະທານອາຫານຢູ່ທີ່ນັ້ນ.[9]ຜູ້ຍິງຄົນນີ້ເວົ້າກັບຜົວຂອງນາງວ່າ,“
ດຽວນີ້ຂ້ອຍເຊື່ອວ່າ ຜູ້ຊາຍຄົນທີ່ຍ່າງຜ່ານມາເຮືອນເຮົາເລື້ອຍໆ ນັ້ນເປັນຄົນບໍຣິສຸດຂອງພຣະເຈົ້າ.
[10]ຂໍໃຫ້ພວກຂ້ານ້ອຍສ້າງຫ້ອງນ້ອຍໆຢູ່ເທິງດາດຟ້າສຳລັບເອລີຊາ, ແລະໃຫ້ພວກຂ້ານ້ອຍເອົາຕຽງນອນ, ໂຕະ, ຕັ່ງ, ແລະໂຄມໄຟໄວ້ໃຫ້ທ່ານ.
ເມື່ອທ່ານມາຮອດ ທ່ານຈະໄດ້ເຂົ້າໄປພັກຢູ່ຫ້ອງນັ້ນ.”[11]ດັ່ງນັ້ນເມື່ອຮອດມື້ທີ່ເອລີຊາໄດ້ມາຢຸດຢູ່ບ່ອນນັ້ນອີກ, ທ່ານກໍໄດ້ພັກຢູ່ໃນຫ້ອງນັ້ນ
ແລະນອນພັກຢູ່ບ່ອນນັ້ນ.
[12]ເອລີຊາໄດ້ບອກເກຮາຊີຄົນຮັບໃຊ້ຂອງທ່ານວ່າ, "ຈົ່ງໄປເອີ້ນຜູ້ຍິງຊາວຊູເນມຄົນນີ້ມາ." ເມື່ອເຂົາໄດ້ເອີ້ນນາງ, ນາງກໍໄດ້ມາຢືນຢູ່ຕໍ່ຫນ້າທ່ານ.
[13]ເອລີຊາໄດ້ກ່າວກັບເກຮາຊີວ່າ,“ ຈົ່ງບອກກັບນາງວ່າ, ນາງລຳບາກແບບນີ້ເພື່ອເຮົາ ຈະໃຫ້ເຮົາເຮັດສິ່ງໃດເພື່ອນາງໄດ້ແດ່?
ຫລືຈະໃຫ້ກ່າວຫຍັງກັບຜູ້ບັນຊາການກອງທັບ?"" ນາງໄດ້ຕອບວ່າ," ຂ້ານ້ອຍຢູ່ສະບາຍດີໃນທ່າມກາງຄົນຂອງຂ້ານ້ອຍ."
[14]ດັ່ງນັ້ນເອລີຊາຈຶ່ງຖາມວ່າ, "ຖ້າດັ່ງນັ້ນຈະໃຫ້ເຮົາເຮັດຫຍັງ, ເພື່ອນາງ?" ເກຮາຊີ ຕອບວ່າ, "ແທ້ຈິງແລ້ວ, ນາງບໍ່ມີລູກຊາຍ,
ແລະສາມີຂອງນາງເຖົ້າແກ່ແລ້ວ."[15]ດັ່ງນັ້ນເອລີຊາຈຶ່ງຕອບວ່າ, "ໄປເອີ້ນນາງມາ." ເມື່ອລາວໄດ້ເອີ້ນນາງມາ, ນາງກໍໄດ້ຢືນຢູ່ທີ່ຫນ້າປະຕູ.
[16]ເອລີຊາໄດ້ກ່າວວ່າ, "ເມື່ອເຖິງເວລານີ້ຂອງປີຫນ້າ, ເຈົ້າຈະໄດ້ອູ້ມລູກຊາຍຄົນຫນຶ່ງ." ນາງໄດ້ຕອບວ່າ, "ບໍ່, ຄົນຂອງພຣະເຈົ້າ
ແລະເຈົ້ານາຍຂອງຂ້ານ້ອຍ, ຢ່າຕົວະຄົນຮັບໃຊ້ຂອງທ່ານເລີຍ."
[17]ແຕ່ວ່າຜູ້ຍິງຄົນນັ້ນໄດ້ຕັ້ງທ້ອງ ແລະ ເກີດລູກຊາຍຄົນຫນຶ່ງ ເມື່ອເຖິງເວລາດຽວກັນໃນປີຕໍ່ມາ, ດັ່ງທີ່ເອລີເຊໄດ້ກ່າວກັບນາງ.
[18]ເມື່ອເດັກນ້ອຍຄົນນັ້ນໃຫຍ່ຂຶ້ນແລ້ວ, ມື້ຫນຶ່ງລາວອອກໄປຫາພໍ່ຂອງລາວ, ເຊິ່ງຢູ່ກັບຄົນເກັບກ່ຽວເຂົ້າ.[19]ລາວເວົ້າກັບພໍ່ວ່າ, "ຫົວຂອງຂ້ອຍ,
ຫົວຂອງຂ້ອຍ." ພໍ່ຂອງລາວເວົ້າກັບຄົນຮັບໃຊ້ຂອງລາວວ່າ, "ອູ້ມລາວໄປຫາແມ່ຂອງລາວ."[20]ເມື່ອຄົນຮັບໃຊ້ໄດ້ພາລາວມາຫາແມ່ຂອງລາວ,
ເດັກນ້ອຍຄົນນັ້ນກໍໄດ້ນັ່ງຢູ່ເທິງຕັກຂອງແມ່ຈົນເຖິງຕອນທ່ຽງ ແລະ ຫລັງຈາກນັ້ນກໍໄດ້ຕາຍໄປ.
[21]ດັ່ງນັ້ນ ນາງຈຶ່ງໄດ້ລຸກຂຶ້ນແລະເອົາເດັກຊາຍຜູ້ນັ້ນນອນຢູ່ເທິງບ່ອນນອນຂອງຄົນຂອງພຣະເຈົ້າ, ປິດປະຕູ, ແລະອອກໄປຂ້າງນອກ.
[22]ນາງກໍໄດ້ໄປເອີ້ນຜົວຂອງນາງ, ແລະກ່າວວ່າ, "ກະຣຸນາສົ່ງຄົນຮັບໃຊ້ຄົນ ຫນຶ່ງກັບລໍໂຕຫນຶ່ງມາໃຫ້ຂ້ອຍ
ເພື່ອຂ້ອຍຈະຮີບໄປຫາຄົນຂອງພຣະເຈົ້າ ແລະ ຂ້ອຍຈະກັບມາ."
[23]ຜົວຂອງນາງໄດ້ຖາມວ່າ, "ເປັນຫຍັງເຈົ້າຈຶ່ງຕ້ອງໄປຫາເພິ່ນໃນມື້ນີ້? ມັນບໍ່ແມ່ນເດືອນອອກໃຫມ່ຫລືວັນສະບາໂຕ." ນາງຕອບວ່າ,
"ບໍ່ເປັນຫຍັງດອກ."[24]ແລ້ວນາງກໍໄດ້ຜູກອານລໍ ແລະສັ່ງຄົນຮັບໃຊ້ວ່າ, "ຈົ່ງຮີບຂີ່ລໍໄປໄວໆ; ຢ່າຊ້ານອກຈາກເຮົາສັ່ງ."
[25]ດັ່ງນັ້ນ ນາງກໍໄດ້ຮີບອອກເດີນທາງແລະມາຮອດຄົນຂອງພຣະເຈົ້າທີ່ພູເຂົາກາເມນ. ດັ່ງນັ້ນເມື່ອຄົນຂອງພຣະເຈົ້າໄດ້ເຫັນນາງຢູ່ໃນໄລຍະໄກ,
ທ່ານໄດ້ເວົ້າກັບເກຮາຊີ ຄົນຮັບໃຊ້ຂອງທ່ານວ່າ,“ ເບິ່ງແມ, ແມ່ຍິງຊາວຊູເນມຄົນນັ້ນ.[26]ຈົ່ງຮີບໄປຮັບນາງເຖີດ ແລະຖາມນາງວ່າ
ລາວລວມທັງຜົວຂອງລາວ ແລະເດັກສະບາຍດີບໍ່? '"ນາງໄດ້ຕອບວ່າ, "ສະບາຍດີ."
[27]ເມື່ອນາງມາພົບຄົນຂອງພຣະເຈົ້າຢູ່ເທິງພູເຂົາແລ້ວ, ນາງກໍໄດ້ເຂົ້າໄປກອດຕີນຂອງທ່ານໄວ້. ເກຮາຊີຈຶ່ງໄດ້ເຂົ້າມາຈະຈັບນາງອອກໄປ,
ແຕ່ຄົນຂອງພຣະເຈົ້າກ່າວວ່າ, "ປ່ອຍນາງເຖາະ ເພາະນາງມີຄວາມຣະທົມຂົມຂື່ນຫລາຍ, ແລະ ພຣະຢາເວໄດ້ປິດເລື່ອງນີ້ໄວ້ຈາກເຮົາ,
ແລະບໍ່ໄດ້ແຈ້ງໃຫ້ເຮົາຮູ້."
[28]ແລ້ວນາງເວົ້າວ່າ, "ຂ້ານ້ອຍໄດ້ລູກຊາຍ, ຈາກເຈົ້ານາຍຂອງຂ້ານ້ອຍບໍ? ຂ້ານ້ອຍບໍ່ໄດ້ເວົ້າບໍ່ວ່າ
ຢ່າຫລອກຂ້ານ້ອຍເລີຍ'?"[29]ຫລັງຈາກນັ້ນເອລີຊາໄດ້ກ່າວຕໍ່ເກຮາຊີວ່າ, "ຄາດແອວຂອງເຈົ້າ ແລ້ວຈັບເອົາໄມ້ເທົ້າຂອງເຮົາໄວ້ໃນມືຂອງເຈົ້າ.
ໄປທີ່ເຮືອນຂອງນາງເທາະ. ຖ້າເຈົ້າພົບໃຜ, ຢ່າທັກທາຍ, ແລະ ຖ້າໃຜຖາມເຈົ້າ, ກໍຢ່າໄດ້ຕອບ.
ຈົ່ງວາງໄມ້ເທົ້າຂອງເຮົາເທິງຫນ້າຂອງເດັກຄົນນັ້ນ."
[30]ແຕ່ແມ່ຂອງເດັກຄົນນັ້ນໄດ້ກ່າວວ່າ, "ພຣະຢາເວຊົງພຣະຊົນຢູ່ ແລະຕົວທ່ານເອງກໍມີຊີວິດຢູ່ແທ້ສັນໃດ, ຂ້ານ້ອຍຈະບໍ່ໄປຈາກທ່ານສັນນັ້ນ."
ດັ່ງນັ້ນເອລີຊາກໍລຸກຂຶ້ນແລະຕິດຕາມນາງໄປ.[31]ເກຮາຊີໄດ້ລ່ວງຫນ້າໄປກ່ອນ ແລະວາງໄມ້ເທົ້າເທິງຫນ້າຂອງເດັກນ້ອຍນັ້ນ,
ແຕ່ເດັກນ້ອຍບໍ່ໄດ້ເວົ້າຫລືໄດ້ຍິນ. ດັ່ງນັ້ນແລ້ວ ເກຮາຊີ ຈຶ່ງໄດ້ກັບມາພົບເອລີຊາ ແລະບອກທ່ານວ່າ, "ເດັກນ້ອຍຍັງບໍ່ຕື່ນເລີຍ."
[32]ເມື່ອເອລີຊາໄປຮອດເຮືອນ, ເດັກນັ້ນໄດ້ຕາຍແລ້ວ ແລະນອນຢູ່ເທິງຕຽງ.[33]ດັ່ງນັ້ນເອລີຊາຈຶ່ງໄດ້ເຂົ້າໄປທາງໃນ
ແລະປິດປະຕູຢູ່ກັບເດັກນັ້ນແລະຕົວເພິ່ນເອງ ແລະອະທິຖານຫາພຣະຢາເວ.[34]ເພິ່ນໄດ້ລຸກຂຶ້ນແລະໄດ້ນອນທັບເດັກນັ້ນ; ເພິ່ນໄດ້ເອົາປາກທັບປາກ
ຕາທັບຕາ ແລະມືທັບມື. ເພິ່ນໄດ້ຢຽດຕົວຂອງເພິ່ນເທິງເດັກຊາຍ, ແລະຮ່າງກາຍຂອງເດັກຊາຍນັ້ນກໍເລີ່ມອົບອຸ່ນຂຶ້ນມາ.


generated on Tue Jun 17 19:01:42 2025

[35]ຈາກນັ້ນເອລີຊາກໍໄດ້ລຸກຂຶ້ນ ແລະໄດ້ຍ່າງໄປອ້ອມຫ້ອງແລ້ວກໍຂຶ້ນໄປ ແລະໄດ້ຢຽດຕົວຂອງເພິ່ນເທິງເດັກຊາຍອີກ. ເດັກນ້ອຍໄດ້ຈາມເຈັດເທື່ອ
ແລ້ວກໍໄດ້ມືນຕາຂອງເຂົາ![36]ດັ່ງນັ້ນເອລີຊາຈຶ່ງໄດ້ເອີ້ນເກຮາຊີ ແລະກ່າວວ່າ,“ ຈົ່ງໄປເອີ້ນຍິງຊາວຊູເນມມາ!”
ດັ່ງນັ້ນເກຮາຊີຈຶ່ງໄດ້ເອີ້ນນາງເຂົ້າມາໃນຫ້ອງ, ແລະເມື່ອນາງເຂົ້າໄປໃນຫ້ອງ, ເອລີຊາໄດ້ກ່າວວ່າ,
"ຈົ່ງອູ້ມເອົາລູກຊາຍຂອງເຈົ້າຂຶ້ນເຖີດ."[37]ແລ້ວນາງໄດ້ເຂົ້າມາກົ້ມຕົວລົງທີ່ຕີນຂອງເອລີຊາ ແລະກົ້ມຂາບລົງເຖິງພື້ນ,
ແລະຫລັງຈາກນັ້ນນາງກໍໄດ້ອູ້ມລູກຊາຍຂອງນາງຂຶ້ນແລະພາອອກໄປທາງນອກ.
[38]ຫລັງຈາກນັ້ນເອລີຊາກໍໄດ້ມາທີ່ກິນການອີກຄັ້ງ. ໃນແຜ່ນດິນເກີດມີຄວາມອຶດຢາກ, ແລະພວກຜູ້ທຳນວາຍກຳລັງນັ່ງຢູ່ຕໍ່ຫນ້າເພິ່ນ.
ເພິ່ນຈຶ່ງໄດ້ເວົ້າກັບຄົນຮັບໃຊ້ຂອງເພິ່ນວ່າ,
"ຈົ່ງເອົາຫມໍ້ໃຫຍ່ໃສ່ເຕົາໄຟແລະຕົ້ມນ້ຳແກງໃຫ້ແກ່ພວກຜູ້ຄຳທຳນວາຍ."[39]ມີຄົນຫນຶ່ງໃນພວກເຂົາໄດ້ອອກໄປໃນສວນເພື່ອເກັບຜັກ.
ພວກເຂົາໄດ້ພົບເຄືອເຖົາປ່າເຄືອຫນຶ່ງ ແລະໄດ້ເກັບນ້ຳເຕົ້າປ່າຫໍ່ໄວ້ໃນເສື້ອຄຸມຈົນເຕັມ. ພວກເຂົາຕັດມັນລົງແລະເອົາໃສ່ໃນຫມໍ້ແກງ,
ໂດຍບໍ່ຮູ້ວ່າເປັນພືດຊະນິດໃດ.
[40]ດັ່ງນັ້ນເຂົາຈຶ່ງເອົານ້ຳແກງອອກໃຫ້ຄົນເຫລົ່ານັ້ນກິນ. ຕໍ່ມາ, ໃນຂະນະທີ່ພວກເຂົາກຳລັງກິນຢູ່ນັ້ນ, ພວກເຂົາໄດ້ຮ້ອງຂຶ້ນ ແລະໄດ້ເວົ້າວ່າ,
"ຄົນຂອງພຣະເຈົ້າ, ມີຄວາມຕາຍຢູ່ໃນຫມໍ້ນັ້ນ!" ດັ່ງນັ້ນພວກຂ້ານ້ອຍບໍ່ສາມາດຈະກິນມັນອີກຕໍ່ໄປໄດ້.[41]ແຕ່ເອລີຊາເວົ້າວ່າ,
"ຈົ່ງໄປເອົາແປ້ງມາ." ທ່ານໄດ້ໂຍນລົງໃນຫມໍ້ ແລະກ່າວວ່າ, "ຈົ່ງຖອກມັນອອກໃຫ້ຄົນເຫລົ່ານັ້ນກິນ."
ດັ່ງນັ້ນມັນກໍບໍ່ມີອັນຕະລາຍຢູ່ໃນຫມໍ້ນັ້ນອີກເລີຍ.
[42]ມີຊາຍຄົນຫນຶ່ງໄດ້ມາຈາກບາອານ ຊາລີຊາ ມາຫາຄົນຂອງພຣະເຈົ້າ
ແລະໄດ້ນຳເອົາເຂົ້າຈີ່ເຂົ້າບາເລຊາວກ້ອນຈາກການເກັບກ່ຽວພືດຜົນແລກໃສ່ກະສອບຂອງເຂົາມາແລະຮວງເຂົ້າໃຫມ່. ເພິ່ນກ່າວວ່າ,
"ຈົ່ງໃຫ້ສິ່ງນີ້ແກ່ປະຊາຊົນເພື່ອພວກເຂົາຈະໄດ້ກິນ."[43]ຄົນໃຊ້ຂອງເພິ່ນເວົ້າວ່າ,
"ຂ້ານ້ອຍຈະຕັ້ງອາຫານພຽງເທົ່ານີ້ໃຫ້ຄົນຫນຶ່ງຮ້ອຍຄົນກິນໄດ້ແນວໃດ?" ແຕ່ເອລີຊາໄດ້ກ່າວວ່າ, "ຈົ່ງໃຫ້ສິ່ງນີ້ແກ່ຄົນເຫລົ່ານັ້ນ,
ເພື່ອພວກເຂົາຈະໄດ້ກິນ, ເພາະວ່າພະຢາເວໄດ້ກ່າວວ່າ, ພວກເຂົາທັງຫລາຍຈະໄດ້ກິນ
ແລະຈະຍັງເຫລືອອີກ."[44]ດັ່ງນັ້ນພວກຄົນຮັບໃຊ້ຂອງເພິ່ນ ຈຶ່ງໄດ້ຕັ້ງອາຫານໄວ້ຕໍ່ຫນ້າເຂົາທັງຫລາຍ, ພວກເຂົາໄດ້ກິນ, ແລະຍັງເຫລືອຢູ່ຈິງ,
ຄືກັບຖ້ອຍຄຳຂອງພຣະຢາເວທີ່ໄດ້ຊົງສັນຍາໄວ້.


generated on Tue Jun 17 19:01:42 2025

5 [1]ບັດນີ້ນາອາມານ, ຜູ້ບັນຊາການກອງທັບຂອງກະສັດແຫ່ງອາຣາມ, ເປັນຄົນທີ່ສຳຄັນແລະມີກຽດໃນສາຍຕາຂອງເຈົ້ານາຍຂອງທ່ານ,
ເພາະພຣະຢາເວໄດ້ປຣະທານຊັຍຊະນະແກ່ອາຣາມ. ທ່ານຍັງເປັນຄົນແຂງແຮງ, ມີຄວາມກ້າຫານ, ແຕ່ທ່ານເປັນພະຍາດຂີ້ທູດ.
[2]ມີໂຈນຊາວອາຣາມໄດ້ອອກໄປ ແລະ ໄດ້ຈັບເອົາເດັກຍິງຄົນ ຫນຶ່ງມາຈາກແຜ່ນດິນອິສະຣາເອນ. ນາງໄດ້ມາຮັບໃຊ້ເມຍຂອງນາອາມານ.

[3]ເດັກຍິງເວົ້າກັບນາຍຜູ້ຍິງຂອງລາວວ່າ, "ຂ້ານ້ອຍປຣາຖນາຢາກໃຫ້ເຈົ້ານາຍຜູ້ຊາຍໄປພົບກັບຜູ້ທຳນວາຍ ເຊິ່ງຢູ່ເມືອງຊາມາເຣຍ
ແລ້ວເພິ່ນຈະໄດ້ປິ່ນປົວເຈົ້ານາຍຂອງຂ້ານ້ອຍໃຫ້ຫາຍຈາກພະຍາດຂີ້ທູດຂອງທ່ານ."[4]ດັ່ງນັ້ນນາອາມານຈຶ່ງໄດ້ເຂົ້າໄປຫາກະສັດແຫ່ງອາຣາມ
ແລະ ກ່າວວ່າ ເດັກຍິງຈາກແຜ່ນດິນອິສະຣາເອນເວົ້າເຊັ່ນນີ້.
[5]ດັ່ງນັ້ນກະສັດແຫ່ງອາຣາມຈຶ່ງໄດ້ກ່າວວ່າ, "ຈົ່ງໄປເຖີດ, ແລະເຮົາຈະສົ່ງຈົດຫມາຍ ຫາກະສັດອິສະຣາເອນ." ນາອາມານກໍໄດ້ອອກໄປ ແລະ
ເອົາກັບເງິນ 10 ຕະລັນ, ຄຳຫົກພັນແຜ່ນ, ແລະເຄື່ອງນຸ່ງຮົ່ມເພື່ອປ່ຽນສິບຊຸດໄປພ້ອມ.[6]ທ່ານຍັງໄດ້ເອົາຈົດຫມາຍ ໄປຍັງກະສັດອິສະຣາເອນ
ມີໃຈຄວາມວ່າ, "ບັດນີ້ເມື່ອຈົດ ຫມາຍນີ້ຖືກສົ່ງມາເຖິງທ່ານ, ທ່ານຈະຊາບວ່າຂ້າພະເຈົ້າໄດ້ສົ່ງນາອາມານຜູ້ຮັບໃຊ້ຂອງຂ້າພະເຈົ້າມາຫາທ່ານ,
ເພື່ອທ່ານຈະໄດ້ປິ່ນປົວໃຫ້ຫາຍຈາກພະຍາດຂີ້ທູດຂອງເຂົາ."
[7]ເມື່ອກະສັດແຫ່ງອິສະຣາເອນໄດ້ອ່ານຈົດຫມາຍ ດັ່ງກ່າວແລ້ວ, ພະອົງໄດ້ຈີກເສື້ອຜ້າຂອງພະອົງ ແລະ ກ່າວວ່າ, "ເຮົາແມ່ນພຣະເຈົ້າ,
ເຊິ່ງຈະຂ້າໃຫ້ຕາຍແລະເຮັດໃຫ້ມີຊີວິດບໍ, ຜູ້ຊາຍຄົນນີ້ຈຶ່ງຕ້ອງການໃຫ້ເຮົາປິ່ນປົວຄົນຫນຶ່ງໃຫ້ຫາຍຈາກພະຍາດຂີ້ທູດ?
ເບິ່ງຄືວ່າທ່ານກຳລັງຈະເລີ່ມຕົ້ນເລື່ອງໂຕ້ຖຽງກັບເຮົາ."
[8]ດັ່ງນັ້ນ ເມື່ອເອລີຊາຄົນຂອງ ພຣະເຈົ້າໄດ້ຍິນວ່າ ກະສັດແຫ່ງອິສະຣາເອນໄດ້ຈີກເສື້ອຜ້າຂອງພະອົງ, ທ່ານຈຶ່ງໄດ້ສົ່ງຂ່າວໄປຫາກະສັດວ່າ,"
ເປັນຫຍັງພະອົງຈຶ່ງຈີກເສື້ອຜ້າຂອງພະອົງ? ໃຫ້ເຂົາມາຫາຂ້ານ້ອຍເຖີດ, ແລະ ເຂົາຈະຮູ້ວ່າມີຜູ້ທຳນວາຍຄົນຫນຶ່ງໃນອິສະຣາເອນ."[9]ດັ່ງນັ້ນ
ນາອາມານຈຶ່ງໄດ້ມາພ້ອມດ້ວຍບັນດາມ້າ ແລະ ລົດມ້າເສິກຂອງທ່ານ ແລະ ຢືນຢູ່ປະຕູເຮືອນຂອງເອລີຊາ.
[10]ເອລີເຊກໍໄດ້ສົ່ງຜູ້ສົ່ງຂ່າວໄປບອກທ່ານວ່າ, "ຈົ່ງໄປ ແລະ ຈຸ່ມຕົວຂອງທ່ານລົງໃນແມ່ນ້ຳຈໍແດນເຈັດຄັ້ງ, ແລະ
ເນື້ອຫນັງຂອງທ່ານຈະກັບຄືນມາຄືເກົ່າ, ແລະ ທ່ານຈະສະອາດ."
[11]ແຕ່ນາອາມານກໍໃຈຮ້າຍ ແລະ ໄດ້ກ່າວວ່າ,“ ເບິ່ງແມ, ຂ້ອຍຄິດວ່າເພິ່ນຄົງຈະອອກມາຫາຂ້ອຍແທ້ໆ ແລະ ຢືນຢູ່ ແລະ
ຮ້ອງຫາພຣະຢາເວພຣະເຈົ້າຂອງເພິ່ນ, ແລະໂບກມືຢູ່ເທິງບ່ອນນັ້ນ ແລະ ປິ່ນປົວພະຍາດຂີ້ທູດຂອງຂ້ອຍ.[12]ອາບານາ ແລະ ຟຣາປັກ,
ແມ່ນ້ຳຂອງເມືອງດາມັດກັດ, ດີກວ່າແມ່ນ້ຳ ທັງຫມົດຂອງອິສະຣາເອນ? ຂ້ອຍຈະລ້າງຕົວໃນແມ່ນ້ຳເຫລົ່ານັ້ນ ແລະ ຈະສະອາດບໍ່ໄດ້ບໍ?
ສະນັ້ນທ່ານຈຶ່ງຫັນຫລັງຄືນໄປ ແລະ ຈາກໄປດ້ວຍຄວາມໂກດຮ້າຍ.
[13]ເມື່ອຄົນຮັບໃຊ້ຂອງນາອາມານມາໄດ້ເຂົ້າໃກ້ ແລະ ເວົ້າກັບທ່ານວ່າ,“ ບິດາຂອງຂ້ານ້ອຍ,
ຖ້າຜູ້ທຳນວາຍໄດ້ສັ່ງໃຫ້ທ່ານເຮັດໃນສິ່ງທີ່ຍາກຢ່າງຫນຶ່ງ, ທ່ານຈະບໍ່ເຮັດບໍ? ທ່ານຄວນຈະກະທຳຫລາຍເທົ່າໃດ, ຖ້າເຊັ່ນນັ້ນແລ້ວ
ເມື່ອຜູ້ທຳນວາຍສັ່ງທ່ານໃຫ້ເຮັດສິ່ງທີ່ງ່າຍວ່າ "ຈົ່ງໄປຈຸ່ມຕົວຂອງທ່ານ ແລະ ໃຫ້ສະອາດເຖີດ, 'ທ່ານຍິ່ງຄວນຈະເຮັດບໍ່ແມ່ນບໍ?
'”[14]ຫລັງຈາກນັ້ນທ່ານໄດ້ລົງໄປ ແລະ ຈຸ່ມຕົວເຈັດຄັ້ງໃນແມ່ນ້ຳຈໍແດນ, ເພາະເຊື່ອຟັງຕາມຖ້ອຍຄຳຂອງຄົນຂອງພຣະເຈົ້າ.
ເນື້ອຫນັງຂອງທ່ານໄດ້ຖືກຟື້ນຟູຄືນໃຫມ່ ຄືກັບເນື້ອຫນັງຂອງເດັກນ້ອຍ, ແລະ ທ່ານໄດ້ຫາຍດີຈາກພະຍາດ.
[15]ນາອາມານກັບຄືນມາຫາຄົນຂອງພຣະເຈົ້າ, ທັງຕົວເຂົາພັກພວກທັງຫມົດຂອງເຂົາ, ແລະມາຢືນຢູ່ຕໍ່ຫນ້າທ່ານ. ເຂົາໄດ້ກ່າວວ່າ, "ເບິ່ງແມ,
ຂ້າພະເຈົ້າຮູ້ແລ້ວວ່າບໍ່ມີພຣະເຈົ້າອື່ນໃດຢູ່ໃນທົ່ວແຜ່ນດິນ ນອກຈາກຢູ່ໃນອິສະຣາເອນ. ດັ່ງນັ້ນ
ກະຣຸນາຮັບຂອງກຳນັນຈາກຄົນຮັບໃຊ້ຂອງທ່ານເຖີດ."[16]ແຕ່ເອລີຊາໄດ້ຕອບວ່າ, "ພຣະຢາເວເຊິ່ງເຮົາຮັບໃຊ້ຊົງພຣະຊົນຢູ່,
ເຮົາຈະບໍ່ໄດ້ຮັບຫຍັງເລີຍ." ນາອາມານໄດ້ຮຽກຮ້ອງໃຫ້ເອລີຊາຮັບເອົາຂອງຂວັນໄວ້, ແຕ່ທ່ານໄດ້ປະຕິເສດ.
[17]ດັ່ງນັ້ນນາອາມານນາຈຶ່ງໄດ້ກ່າວວ່າ,“ ຫາກທ່ານບໍ່ຮັບ, ກະຣຸນາໃຫ້ຄົນຮັບໃຊ້ຂອງທ່ານ
ເອົາດິນແຫ່ງນີ້ກັບໄປຫລາຍພໍທີ່ລໍສອງໂຕຈະບັນທຸກໄດ້ເຖີດ, ເພາະວ່ານັບແຕ່ນີ້ໄປ, ຄົນຮັບໃຊ້ຂອງທ່ານຈະບໍ່ຖວາຍເຄື່ອງເຜົາບູຊາ ຫລື
ເຄື່ອງບູຊາແກ່ພະໃດໆ ແຕ່ຈະຖວາຍແດ່ພຣະຢາເວເທົ່ານັ້ນ.[18]ໃນເລື່ອງນີ້ ຂໍພຣະຢາເວ ຊົງໃຫ້ອະພັຍຄົນຮັບໃຊ້ຂອງພຣະອົງ, ຄື ເມື່ອ,
ກະສັດນາຍຂອງຂ້າພະເຈົ້າເຂົ້າໄປໃນວິຫານຂອງພະຣິມໂມນເພື່ອຈະນະມັສະການຢູ່ທີ່ນັ້ນ, ແລະພະອົງໄດ້ພິງຢູ່ທີ່ມືຂອງຂ້າພະເຈົ້ າແລະ
ຂ້າພະເຈົ້າໂນ້ມຕົວລົງຄຳນັບໃນວິຫານຂອງພະຣິມໂມນ,
ຂໍພຣະຢາເວຊົງໃຫ້ອະພັຍແກ່ຄົນຮັບໃຊ້ຂອງພຣະອົງໃນເລື່ອງນີ້ເຖີດ."[19]ເອລີຊາໄດ້ຕອບເຂົາວ່າ, "ຈົ່ງໄປດ້ວຍຄວາມສະຫວັດດີພາບເຖີດ."
ດັ່ງນັ້ນນາອາມານຈຶ່ງຈາກໄປ.
[20]ເຂົາໄດ້ເດີນທາງໄປບໍ່ໄກປານໃດ, ໃນເວລາທີ່ເກຮາຊີ ຄົນຮັບໃຊ້ຂອງເອລີຊາຄົນຂອງພຣະເຈົ້າກ່າວກັບຕົວເອງວ່າ, "ເບິ່ງແມ,
ນາຍຂອງຂ້ານ້ອຍບໍ່ຍອມຮັບເອົາຂອງຂວັນໃນມືຂອງນາອາມານຄົນຂອງອາຣາມທີ່ທ່ານໄດ້ນຳມາໃຫ້. ພຣະຢາເວຊົງພຣະຊົນຢູ່ສັນໃດ,
ຂ້ອຍຈະແລ່ນຕາມຫລັງໄປ ແລະ ຮັບເອົາບາງສິ່ງບາງຢ່າງຈາກທ່ານ."[21]ດັ່ງນັ້ນເກຮາຊີໄດ້ຕາມນາອາມານໄປ.
ເມື່ອນາອາມານເຫັນຄົນແລ່ນນຳຫລັງມາ, ທ່ານກໍໄດ້ໂດດລົງຈາກຣົດມ້າຂອງທ່ານຕ້ອນຮັບເຂົາແລະໄດ້ເວົ້າວ່າ,
"ທຸກຢ່າງຮຽບຮ້ອຍດີແມ່ນບໍ?"[22]ເກຮາຊີໄດ້ຕອບວ່າ,“ ທຸກຢ່າງແມ່ນຮຽບຮ້ອຍດີ, ນາຍຂອງຂ້ານ້ອຍໄດ້ສົ່ງຂ້ານ້ອຍມາ, ໂດຍກ່າວວ່າ, 'ດຽວນີ້,
ມີຊາຍຫນຸ່ມສອງຄົນ ທີ່ມາຈາກເນີນພູເອຟຣາອິມ ທີ່ເປັນລູກຊາຍຂອງຜູ້ທຳນວາຍ ໄດ້ມາຫາຂ້ານ້ອຍ, ກະຣຸນາໃຫ້ເງິນພວກເຂົາຈັກຫນຶ່ງຕະລັນ
ແລະ ເສື້ອຜ້າເພື່ອປ່ຽນຈັກສອງຊຸດ.'"
[23]ນາອາມານຕອບວ່າ, "ຂ້າພະເຈົ້າຍິນດີທີ່ຈະໃຫ້ສອງຕະລັນແກ່ເຈົ້າ." ນາອາມານກໍໄດ້ເວົ້າເນັ້ນໃຫ້ເກຮາຊີ ແລະ
ເອົາເງິນສອງຕະລັນໃສ່ໃນຖົງສອງຖົງ, ພ້ອມທັງເສື້ອຜ້າເພື່ອປ່ຽນສອງຊຸດ, ແລະ ໃຫ້ຄົນຮັບໃຊ້ສອງຄົນແບກຖົງເງິນນຳຫນ້າເກຮາຊີໄປ.[24]ເມື່ອ
ເກຮາຊີມາຮອດເນີນພູ, ເຂົາໄດ້ຮັບເອົາຖົງເງິນຈາກມືຂອງພວກເຂົາ ແລະ ເອົາໄປເຊື່ອງໄວ້ໃນເຮືອນ; ເຂົາໄດ້ສົ່ງພວກເຂົາໄປ,
ແລະພວກເຂົາກໍໄດ້ອອກໄປ.[25]ເມື່ອເກຮາຊີໄດ້ເຂົ້າມາ ແລະ ຢືນຢູ່ຕໍ່ຫນ້ານາຍຂອງເຂົາ, ເອລີຊາໄດ້ຖາມເຂົາວ່າ, "ເກຮາຊີ ເຈົ້າໄປໃສມາ?"
ເຂົາໄດ້ຕອບວ່າ, "ຄົນຮັບໃຊ້ຂອງທ່ານບໍ່ໄດ້ໄປໃສມາດອກ."
[26]ເອລີຊາໄດ້ກ່າວກັບເກຮາຊີວ່າ, "ຈິດໃຈຂອງເຮົາບໍ່ໄດ້ໄປກັບເຈົ້າບໍ ເມື່ອຊາຍຄົນນັ້ນລ້ຽວຣົດມ້າກັບມາພົບເຈົ້າ? ນີ້ແມ່ນເວລາຄວນທີ່ຈະຮັບເງິນ
ແລະ ເສື້ອຜ້າ, ສວນຫມາກກອກ ແລະ ສວນອາງຸ່ນ, ແກະ ແລະ ງົວ, ແລະ ຄົນຮັບໃຊ້ຊາຍ ແລະ ຍິງບໍ?[27]ດັ່ງນັ້ນ

ພະຍາດຂີ້ທູດຂອງນາອາມານຈະຕິດຢູ່ກັບເຈົ້າ ແລະ ລູກຫລານຂອງເຈົ້າຕະຫລອດໄປເປັນນິດ." ດັ່ງນັ້ນເກຮາຊີຈຶ່ງຫາຍຈາກທີ່ຢູ່ຂອງເຂົາ, ແລະ ພະຍາດຂີ້ທູດເປັນສີຂາວຄືຫິມະ.


generated on Tue Jun 17 19:01:42 2025

6 [1]ບັນດາຜູ້ທຳນວາຍໄດ້ກ່າວກັບເອລີຊາວ່າ, "ສະຖານທີ່ທີ່ພວກເຮົາອາສັຍຢູ່ກັບພວກທ່ານນັ້ນ ແມ່ນນ້ອຍເກີນໄປສຳລັບພວກເຮົາທຸກຄົນ.
[2]ຂໍໃຫ້ພວກເຮົາໄປທີ່ແມ່ນ້ຳຈໍແດນ, ແລະໃຫ້ຜູ້ຊາຍແຕ່ລະຄົນຕັດໄມ້ທ່ອນຫນຶ່ງມາ, ແລະສ້າງເປັນທີ່ອາສັຍທີ່ບ່ອນນັ້ນ. "ເອລີຊາໄດ້ຕອບວ່າ,
"ເຈົ້າຈົ່ງໄປເຖີດ."[3]ຄົນຫນຶ່ງໃນນັ້ນໄດ້ກ່າວວ່າ, "ກະຣຸນາໄປນຳຜູ້ຮັບໃຊ້ຂອງທ່ານດ້ວຍ." ເອລີຊາໄດ້ຕອບວ່າ, "ຂ້າພະເຈົ້າຈະໄປ."

[4]ດັ່ງນັ້ນທ່ານຈຶ່ງໄດ້ໄປກັບພວກເຂົາທັງຫລາຍ, ແລະເມື່ອພວກເຂົາມາຮອດແມ່ນ້ຳຈໍແດນ, ພວກເຂົາກໍເລີ່ມຕົ້ນຕັດຕົ້ນໄມ້.
[5]ແຕ່ໃນຂະນະທີ່ຄົນຫນຶ່ງ ກຳລັງຕັດຕົ້ນໄມ້ຢູ່, ຫົວຂວານຂອງເຂົາໄດ້ຕົກລົງໄປໃນນ້ຳ; ລາວຈຶ່ງໄດ້ຮ້ອງອອກມາ ແລະ ເວົ້າວ່າ, "ໂອ້,
ນາຍຂອງຂ້ານ້ອຍ, ຂວານນັ້ນຂ້ານ້ອຍໄດ້ຢືມເຂົາມາ!"
[6]ແລ້ວຄົນຂອງພຣະເຈົ້າຈຶ່ງຖາມວ່າ, "ຂວານນັ້ນຕົກບ່ອນໃດ?" ຊາຍຄົນນັ້ນໄດ້ຊີ້ບອກບ່ອນໃຫ້ ເອລີຊາເຫັນ. ແລ້ວເພິ່ນໄດ້ຕັດໄມ້ທ່ອນຫນຶ່ງ,
ໂຍນລົງໃນນ້ຳ, ແລະເຮັດໃຫ້ຂວານເຫລັກນັ້ນລອຍຂຶ້ນມາ.[7]ເອລີຊາຈຶ່ງໄດ້ກ່າວວ່າ, "ຈັບມັນຂຶ້ນມາແມ."
ດັ່ງນັ້ນຊາຍຄົນນັ້ນໄດ້ເອົາມືຂອງລາວຈັບຂຶ້ນມາ.
[8]ບັດນີ້ ກະສັດແຫ່ງອາຣາມກຳລັງເຮັດສົງຄາມກັບອິສະຣາເອນ. ທ່ານໄດ້ປຶກສາກັບຜູ້ຮັບໃຊ້ຂອງທ່ານ, ໂດຍກ່າວວ່າ,
"ພວກເຮົາຈະຕັ້ງຄ້າຍພັກຂອງພວກເຮົາຢູ່ບ່ອນນັ້ນ."[9]ດັ່ງນັ້ນຄົນຂອງພຣະເຈົ້າໄດ້ສົ່ງຂ່າວໄປຍັງກະສັດແຫ່ງອິສະຣາເອນ, ແລະກ່າວວ່າ,
"ຂໍໃຫ້ພະອົງຈົ່ງຣະວັງ ຢ່າຜ່ານໄປບ່ອນນັ້ນ, ເພາະຊາວອາຣາມ ກຳລັງລົງໄປບ່ອນນັ້ນ."
[10]ກະສັດແຫ່ງອິສະຣາເອນ ໄດ້ສົ່ງຂ່າວໄປຍັງສະຖານທີ່ຊຶ່ງຄົນຂອງພຣະເຈົ້າໄດ້ບອກ ແລະ ໄດ້ເຕືອນພະອົງໄວ້. ຫລາຍກວ່າຫນຶ່ງຫລືສອງຄັ້ງ,
ເມື່ອກະສັດໄປບ່ອນນັ້ນ, ພະອົງໄດ້ຣະວັງຕົວ.[11]ກະສັດແຫ່ງອາຣາມໄດ້ໂກດແຄ້ນກ່ຽວກັບຄຳເຕືອນເຫລົ່ານີ້,
ແລະທ່ານໄດ້ເອີ້ນຜູ້ຮັບໃຊ້ຂອງທ່ານມາ ແລະກ່າວກັບພວກເຂົາວ່າ, "ພວກເຈົ້າຈະບໍ່ບອກເຮົາບໍ່ວ່າ ໃຜໃນພວກເຮົາ
ຢູ່ຝ່າຍກະສັດແຫ່ງອິສະຣາເອນ?"
[12]ດັ່ງນັ້ນ ຄົນຮັບໃຊ້ຄົນຫນຶ່ງໄດ້ກ່າວວ່າ, "ບໍ່ມີໃຜ, ຂ້າແດ່ກະສັດ, ເຈົ້ານາຍຂອງຂ້ານ້ອຍ, ເພາະເອລີຊາຜູ້ທຳນວາຍໃນອິສະຣາເອນ
ບອກກະສັດແຫ່ງອິສະຣະເອນດ້ວຍຖ້ອຍຄຳ ເຊິ່ງພະອົງໄດ້ກ່າວໃນຫ້ອງນອນຂອງພະອົງ!"[13]ກະສັດຈຶ່ງກ່າວວ່າ,
"ຈົ່ງໄປເບິ່ງບ່ອນທີ່ເອລີຊາອາສັຍຢູ່ນັ້ນ ເພື່ອເຮົາຈະສົ່ງຄົນໄປຈັບຕົວມາ." ແລະ ມີບາງຄົນໄດ້ກ່າວກັບພະອົງວ່າ, "ເບິ່ງແມ, ເຂົາຢູ່ທີ່ໂດທານ."
[14]ດັ່ງນັ້ນກະສັດຈຶ່ງໄດ້ສົ່ງຣົດມ້າ, ຣົດຮົບ, ແລະທະຫານຈຳນວນຫລວງຫລາຍໄປທີ່ໂດທານ. ພວກເຂົາເດີນທາງໄປເວລາກາງຄືນ ແລະ
ປິດລ້ອມຕົວເມືອງ.[15]ເມື່ອຜູ້ຮັບໃຊ້ຂອງຄົນຂອງພຣະເຈົ້າໄດ້ຕື່ນແຕ່ເຊົ້າແລະອອກໄປຂ້າງນອກ,
ຈຶ່ງເຫັນກອງທັບໃຫຍ່ທີ່ມີມ້າແລະຣົດຮົບມາປິດລ້ອມຕົວເມືອງ. ຄົນຮັບໃຊ້ຂອງທ່ານໄດ້ເວົ້າວ່າ, "ໂອ້, ເຈົ້ານາຍເອີຍ,
ພວກຂ້ານ້ອຍຈະເຮັດແນວໃດດີ?"[16]ເອລີຊາໄດ້ຕອບວ່າ, "ຢ່າຢ້ານເລີຍ, ເພາະວ່າຄົນທີ່ຢູ່ກັບພວກເຮົາຫລາຍກວ່າຄົນທີ່ຢູ່ກັບພວກເຂົາ."
[17]ເອລີຊາໄດ້ອະທິຖານວ່າ, "ຂ້າແດ່ພຣະຢາເວ, ຂໍຊົງເປີດຕາຂອງເຂົາເພື່ອພວກເຂົາຈະໄດ້ເຫັນ." ແລ້ວພຣະຢາເວ
ໄດ້ຊົງເປີດຕາຂອງຄົນຮັບໃຊ້ຄົນນັ້ນ, ແລະ ເຂົາກໍໄດ້ເຫັນ. ພູເຂົາ, ເຕັມໄປດ້ວຍມ້າ ແລະ ຣົດຮົບໄຟອ້ອມຮອບເອລີຊາ!
[18]ໃນເວລາທີ່ຊາວອາຣາມໄດ້ລົງມາຫາທ່ານ, ເອລີຊາໄດ້ອະທິຖານຕໍ່ພຣະຢາເວ ແລະ ກ່າວວ່າ, "ພຣະອົງເຈົ້າ
ຂໍຊົງເຮັດໃຫ້ຄົນເຫລົ່ານີ້ຕາບອດ." ດັ່ງນັ້ນພຣະຢາເວ ຈຶ່ງໄດ້ເຮັດໃຫ້ພວກເຂົາຕາບອດຄືກັບທີ່ເອລີຊາໄດ້ຂໍ.
[19]ແລ້ວເອລີຊາຈຶ່ງໄດ້ບອກຊາວອາຣາມເຫລົ່ານັ້ນວ່າ, "ບໍ່ແມ່ນທາງນີ້ ແລະ ບໍ່ແມ່ນເມືອງນີ້ ຈົ່ງຕິດຕາມຂ້ອຍມາ ແລະ
ຂ້ອຍຈະພາພວກເຈົ້າໄປຫາຜູ້ຊາຍທີ່ພວກເຈົ້າກຳລັງຊອກຫາຢູ່." ຈາກນັ້ນທ່ານໄດ້ນຳພາພວກເຂົາໄປເມືອງຊາມາເຣຍ.
[20]ຕໍ່ມາເມື່ອພວກເຂົາໄດ້ເຂົ້າໄປໃນກຸງຊາມາເຣຍ, ເອລີຊາໄດ້ທູນວ່າ, "ຂ້າແດ່ພະຢາເວ, ຂໍຈົ່ງເປີດຕາຄົນເຫລົ່ານີ້
ເພື່ອພວກເຂົາຈະໄດ້ເບິ່ງເຫັນ." ພຣະຢາເວ ຈຶ່ງໄດ້ເປີດຕາຂອງພວກເຂົາ, ແລະພວກເຂົາກໍໄດ້ເຫັນ, ພວກເຂົາໄດ້ມາຢູ່ກາງກຸງຊາມາເຣຍ.
[21]ກະສັດຂອງອິສະຣາເອນຈຶ່ງໄດ້ກ່າວແກ່ເອລີຊາ, ເມື່ອພະອົງໄດ້ເຫັນພວກເຂົາວ່າ, "ບິດາຂອງຂ້ານ້ອຍ, ເຮົາຄວນຂ້າພວກເຂົາດີບໍ່?
ເຮົາຄວນຂ້າພວກເຂົາເລີຍບໍ່?"
[22]ເອລີຊາໄດ້ຕອບວ່າ, "ຂໍພະອົງຢ່າຂ້າພວກເຂົາເລີຍ. ຄົນພວກນີ້ທີ່ພະອົງຈະຂ້ານັ້ນ ພະອົງໄດ້ຈັບມາດ້ວຍດາບ ແລະ ທະນູກໍບໍ່ແມ່ນ?
ຂໍຈົ່ງຈັດນ້ຳ ແລະ ເຂົ້າຈີ່, ໃຫ້ພວກເຂົາກິນ ແລະ ດື່ມ,
ແລ້ວປ່ອຍໃຫ້ພວກເຂົາໄປຫາເຈົ້ານາຍຂອງພວກເຂົາເຖີດ."[23]ດັ່ງນັ້ນກະສັດຈຶ່ງຈັດແຈ່ງອາຫານໃຫ້ພວກເຂົາຈຳນວນຫລາຍ, ແລະ
ເມື່ອພວກເຂົາໄດ້ກິນ ແລະ ດື່ມແລ້ວ, ກະສັດກໍໄດ້ປ່ອຍຕົວພວກເຂົາໄປ, ແລະ ພວກເຂົາກໍກັບໄປຫາເຈົ້ານາຍຂອງພວກເຂົາ. ແລະ
ພວກອາຣາມບໍ່ໄດ້ກັບມາໃນດິນແດນອິສະຣາເອນອີກເລີຍ.
[24]ຕໍ່ມາ ພາຍຫລັງເບັນຮາດາດກະສັດແຫ່ງອາຣາມ ໄດ້ຮວບຮວມກອງທັບທັງຫມົດຂອງພະອົງ ແລະໄດ້ໄປໂຈມຕີເມືອງຊາມາເຣຍ ແລະ
ປິດລ້ອມເມືອງດັ່ງກ່າວ.[25]ດັ່ງນັ້ນຈຶ່ງໄດ້ເກີດມີຄວາມອຶດຢາກຢ່າງຫນັກຫນ່ວງໃນເມືອງສະມາເຣຍ. ເບິ່ງແມ,
ຂະນະເມື່ອພວກເຂົາໄດ້ປິດລ້ອມເມືອງໄວ້ ຂະຫນາດຫົວຂອງລໍໂຕຫນຶ່ງຍັງມີລາຄາສູງ ເປັນເງິນຫນັກເຖິງແປດສິບເຊກຽນ, ແລະ
ເມັດຖົ່ວປ່າຂະຫນາດຈຸດສີ່ມີລາຄາຂາຍເຖິງຫ້າເຊກຽນ.[26]ຂະນະທີ່ກະສັດແຫ່ງອິສະຣາເອນ ກຳລັງຍ່າງຜ່ານໃກ້ກຳແພງເມືອງ, ມີຜູ້ຍິງຄົນຫນຶ່ງ
ໄດ້ຮ້ອງຫາພະອົງວ່າວ່າ, "ຂ້າແດ່ກະສັດ, ຂໍຊົງຊ່ວຍດ້ວຍເຖີດ, ກະສັດຂອງຂ້ານ້ອຍ."
[27]ພະອົງໄດ້ກ່າວວ່າ, "ຖ້າພຣະຢາເວ ບໍ່ຊ່ວຍເຈົ້າ, ເຮົາຈະເອົາຄວາມຊ່ວຍເຫລືອຈາກໃສມາໃຫ້ເຈົ້າ? ຈາກລານນວດເຂົ້າບໍ ຫລື
ຈາກບໍ່ບີບນ້ຳອະງຸ່ນ?"[28]ກະສັດກ່າວຕໍ່ໄປວ່າ,“ ນາງມີເລື່ອງຫຍັງບໍ?” ນາງໄດ້ຕອບວ່າ, "ຜູ້ຍິງຄົນນີ້ເວົ້າກັບຂ້ານ້ອຍວ່າ,
'ເອົາລູກຊາຍຂອງເຈົ້າມາໃຫ້ພວກເຮົາກິນໃນມື້ນີ້ເຖີດ,
ແລະພວກເຂົາຈະກິນລູກຊາຍຂອງຂ້ານ້ອຍໃນມື້ອື່ນ."[29]ດັ່ງນັ້ນພວກເຮົາຈຶ່ງໄດ້ຕົ້ມລູກຊາຍຂອງຂ້ານ້ອຍ, ແລະໄດ້ກິນເຂົາ,
ວັນຕໍ່ມາຂ້ານ້ອຍໄດ້ເວົ້າກັບນາງວ່າ, "ຈົ່ງເອົາລູກຊາຍຂອງເຈົ້າມາ ເພື່ອໃຫ້ພວກເຮົາກິນກັນ, ແຕ່ນາງໄດ້ເຊື່ອງລູກຊາຍຂອງນາງໄວ້."
[30]ດັ່ງນັ້ນເມື່ອກະສັດໄດ້ຍິນຖ້ອຍຄຳຂອງຜູ້ຍິງຄົນນັ້ນ, ພະອົງໄດ້ຈີກເສື້ອຜ້າຂອງພະອົງ (ຂະນະທີ່ພະອົງໄດ້ຍ່າງຜ່ານໃກ້ກຳແພງ),
ແລະປະຊາຊົນກໍໄດ້ຫລຽວເຫັນພະອົງໄດ້ໃສ່ຜ້າກະສອບແນບເນື້ອ.[31]ແລ້ວພະອົງໄດ້ກ່າວວ່າ, "ຂໍໃຫ້ພຣະເຈົ້າຈົ່ງລົງໂທດຂ້າພະເຈົ້າ, ແລະ
ຫນັກກວ່າເກົ່າ, ຖ້າຫົວຂອງເອລີຊາລູກຊາຍຂອງຊາຟັດຍັງຢູ່ເທິງບ່າຂອງເຂົາໃນວັນນີ້."

32 ແຕ່ເອລີຊາໄດ້ນັ່ງຢູ່ໃນເຮືອນຂອງເພິ່ນ, ແລະພວກຜູ້ອາວຸໂສກໍນັ່ງຢູ່ດ້ວຍ. ກະສັດໄດ້ສົ່ງຊາຍຄົນ ຫນຶ່ງມາຫາເພິ່ນກ່ອນ,
ແຕ່ກ່ອນທີ່ຈະມີຜູ້ສົ່ງຂ່າວມາເຖິງເອລີຊາ, ເພິ່ນໄດ້ກ່າວກັບຜູ້ອາວຸໂສວ່າ,“ ທ່ານທັງຫລາຍໄດ້ເຫັນຫລືບໍ່
ຄາດຕະກອນຄົນນີ້ໄດ້ສົ່ງຄົນມາຕັດເອົາຫົວຂອງເຮົາ? ເບິ່ງແມ, ເມື່ອຜູ້ສົ່ງຂ່າວມາເຖິງ, ຈົ່ງປິດປະຕູ, ແລະຍຶດປະຕູໃຫ້ແຫນ້ນ. ກັນເຂົາໄວ້
ນັ້ນບໍ່ແມ່ນສຽງຂອງຕີນເຈົ້ານາຍຂອງເຂົາທີ່ນຳມາບໍ?"
33 ໃນຂະນະທີ່ທ່ານກຳລັງສົນທະນາກັບພວກເຂົາທັງຫລາຍຢູ່, ເບິ່ງແມ,
ຜູ້ສົ່ງຂ່າວໄດ້ລົງມາຫາທ່ານ. ກະສັດໄດ້ກ່າວວ່າ, "ຈົ່ງເບິ່ງເຖີດ, ຄວາມເດືອດຮ້ອນນີ້ມາຈາກພຣະຢາເວ.
ເປັນຫຍັງຂ້າພະເຈົ້າຈຶ່ງລໍຖ້າພຣະຢາເວຕໍ່ໄປອີກ?"


generated on Tue Jun 17 19:01:42 2025

7 [1]ເອລີຊາໄດ້ກ່າວວ່າ, "ຈົ່ງຟັງຖ້ອຍຄຳຂອງພຣະຢາເວ. ນີ້ແມ່ນສິ່ງທີ່ພຣະຢາເວກ່າວ: 'ມື້ອື່ນປະມານເວລານີ້,
ແປ້ງທີ່ດີໆຖັງຫນຶ່ງຈະຖືກຂາຍໃນລາຄາຫນຶ່ງເຊກຽນ, ແລະເຂົ້າບາເລສອງຖັງຫນຶ່ງເຊກຽນໃນປະຕູເມືອງສະມາເຣຍ."[2]ຫລັງຈາກນັ້ນ,
ນາຍທະຫານປະຈຳຕົວຄົນຫນຶ່ງຂອງກະສັດໄດ້ຕອບຄົນຂອງພຣະເຈົ້າ, ແລະ ໄດ້ເວົ້າວ່າ, "ເບິ່ງແມ,
ເຖິງແມ່ນວ່າພຣະຢາເວຈະສ້າງປ່ອງຢ້ຽມໃນທ້ອງຟ້າ, ສິ່ງນີ້ຈະເກີດຂຶ້ນໄດ້ບໍ?" ເອລີຊາຕອບວ່າ“ ເບິ່ງເອົາເຖີດ,
ທ່ານຈະສັງເກດເບິ່ງສິ່ງທີ່ຈະເກີດຂຶ້ນດ້ວຍຕາຂອງທ່ານເອງ, ແຕ່ທ່ານຈະບໍ່ກິນຫຍັງເລີຍ”.

[3]ບັດນີ້ມີຄົນປ່ວຍສີ່ຄົນທີ່ເປັນຂີ້ທູດຢູ່ທີ່ທາງເຂົ້ານອກປະຕູເມືອງ. ພວກເຂົາເວົ້າກັນວ່າ, "ພວກເຮົາຈະນັ່ງຖ້າຢູ່ທີ່ນີ້ຈົນຕາຍເຮັດຫຍັງ?
[4]ຖ້າພວກເຮົາເວົ້າວ່າພວກເຮົາຄວນຈະເຂົ້າໄປໃນເມືອງ, ຄວາມອຶດຢາກກໍຢູ່ໃນເມືອງນັ້ນ, ແລະພວກເຮົາຈະຕາຍຢູ່ທີ່ນັ້ນ.
ແຕ່ຖ້າພວກເຮົາຍັງນັ່ງຢູ່ນີ້, ພວກເຮົາກໍຈະຕາຍເຫມືອນກັນ. ສະນັ້ນຈົ່ງມາເຖີດໃຫ້ພວກເຮົາໄປຍັງຄ້າຍຂອງຄົນອາຣາມ.
ຖ້າພວກເຂົາໄວ້ຊີວິດຂອງພວກເຮົາ, ພວກເຮົາຈະມີຊີວິດຢູ່, ແລະຖ້າພວກເຂົາຂ້າພວກເຮົາ, ພວກເຮົາຈະຕ້ອງຕາຍເທົ່ານັ້ນ."
[5]ດັ່ງນັ້ນ ພວກເຂົາໄດ້ລຸກຂຶ້ນໃນເວລາທ່ຽງຄືນເພື່ອຈະເຂົ້າໄປໃນຄ້າຍຂອງຄົນອາຣາມ; ເມື່ອພວກເຂົາໄປຮອດເຂດນອກຂອງຄ້າຍ,
ບໍ່ມີຜູ້ໃດຢູ່ທີ່ນັ້ນຈັກຄົນ.[6]ເພາະວ່າອົງພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ກອງທັບຂອງຊາວອາຣາມໄດ້ຍິນສຽງຂອງຣົດຮົບແລະສຽງມ້າ - ແລະ
ສຽງດັງຂອງກອງທັບໃຫຍ່ອື່ນໆ, ແລະ ພວກເຂົາກ່າວຕໍ່ກັນວ່າ,"
ກະສັດອິສະຣາເອນໄດ້ຈ້າງພວກກະສັດຂອງຊາວຮິດຕີແລະບັນດາກະສັດຂອງຊາວເອຢິບໃຫ້ມາສູ້ກັບພວກເຮົາ."
[7]ດັ່ງນັ້ນ ພວກທະຫານຈຶ່ງໄດ້ລຸກຂຶ້ນແລະຫນີໄປ ໃນເວລາທ່ຽງຄືນ; ແລະໄດ້ປະເຕັນ, ມ້າ, ແລະລໍຂອງພວກເຂົາ,
ແລະປະຄ້າຍພັກຂອງພວກເຂົາ, ແລະໄດ້ຫນີໄປເພື່ອເອົາຊີວິດລອດ.
[8]ເມື່ອຄົນທີ່ເປັນພະຍາດຂີ້ທູດເຫລົ່ານີ້ໄດ້ມາຮອດບໍລິເວນນອກສຸດຂອງຄ້າຍ, ພວກເຂົາໄດ້ເຂົ້າໄປໃນເຕັນຫລັງຫນຶ່ງ ແລະ ກິນແລະດື່ມ, ແລະ
ທັງຂົນເອົາເງິນ ຄຳ ແລະເຄື່ອງນຸ່ງຫົ່ມອອກໄປ ແລະ ເຊື່ອງໄວ້. ພວກເຂົາກັບມາແລະເຂົ້າໄປໃນເຕັ້ນອີກແຫ່ງຫນຶ່ງ
ແລະຂົນເອົາເຄື່ອງຂອງໄປຈາກບ່ອນນັ້ນ, ແລະໄດ້ເຊື່ອງໄວ້.
[9]ພວກເຂົາເວົ້າກັນວ່າ, "ພວກເຮົາເຮັດບໍ່ຖືກເສຍແລ້ວ. ມື້ນີ້ເປັນທີ່ມີຂ່າວດີ, ແຕ່ວ່າພວກເຮົາຮັກສາຄວາມງຽບສະຫງົບຢູ່.
ຖ້າພວກເຮົາລໍຖ້າຈົນກ່ວາມື້ຮຸ່ງເຊົ້າ. ຖ້າການລົງໂທດຈະມາຮອດພວກເຮົາ. ບັດນີ້ແລ້ວ, ມາເຖີດ,
ໃຫ້ພວກເຮົາໄປບອກສຳນັກພະຣາຊວັງ."[10]ດັ່ງນັ້ນພວກເຂົາຈຶ່ງໄປ ແລະ ເອີ້ນຄົນເຝົ້າປະຕູເມືອງ. ພວກເຂົາໄດ້ບອກພວກເຂົາວ່າ,
"ພວກເຮົາໄດ້ໄປເຖິງຄ້າຍທະຫານຂອງຊາວອາຣາມ, ແຕ່ວ່າບໍ່ມີໃຜຢູ່ທີ່ນັ້ນ, ບໍ່ມີສຽງຂອງໃຜ, ແຕ່ວ່າມີມ້າໄດ້ມັດໄວ້, ແລະ ລໍຖືກມັດໄວ້, ແລະ
ເຕັນທັງຫລາຍກໍຕັ້ງຢູ່ຢ່າງນັ້ນ."[11]ແລ້ວບັນດາຄົນເຝົ້າປະຕູໄດ້ຮ້ອງແຈ້ງຂ່າວອອກມາ, ແລະ
ຫລັງຈາກນັ້ນກໍໄດ້ບອກໄປເຖິງສຳນັກຣາຊວັງຂອງກະສັດ.
[12]ແລ້ວກະສັດໄດ້ຕື່ນຂຶ້ນໃນຕອນກາງຄືນ ແລະ ກ່າວກັບຜູ້ຮັບໃຊ້ຂອງພະອົງວ່າ, "ເຮົາຈະບອກພວກເຈົ້າດຽວນີ້
ໃນສິ່ງທີ່ຊາວອາຣາມໄດ້ກະທຳກັບພວກເຮົາ. ພວກເຂົາຮູ້ວ່າພວກເຮົາອຶດຢາກ,
ດັ່ງນັ້ນພວກເຂົາຈຶ່ງໄດ້ອອກຈາກຄ້າຍເພື່ອລີ້ຊ່ອນຕົວຢູ່ໃນທົ່ງນາຂອງພວກເຂົາ ໂດຍກ່າວວ່າ, 'ເມື່ອອິສະຣາເອນອອກຈາກເມືອງ
ເຮົາຈະຈັບເປັນພວກເຂົາ, ແລະ ຈະເຂົ້າໄປໃນເມືອງ.'"[13]ຜູ້ຮັບໃຊ້ຄົນຫນຶ່ງຂອງກະສັດໄດ້ຕອບ ແລະ ທູນວ່າ,
"ກະຣຸນາໃຫ້ບາງຄົນເອົາມ້າຫ້າໂຕທີ່ຍັງເຫລືອຢູ່ໃນເມືອງໄປ. ພວກເຂົາເປັນຄືກັບຄົນອິສະຣາເອນທີ່ເຫລືອຢູ່ -
ປະຈຸບັນສ່ວນຫລາຍແມ່ນຕາຍແລ້ວ; ຂໍໃຫ້ພວກເຮົາສົ່ງພວກເຂົາໄປ ແລະ ເບິ່ງ."
[14]ດັ່ງນັ້ນ ພວກເຂົາຈຶ່ງໄດ້ເອົາຣົດມ້າສອງຄັນພ້ອມດ້ວຍມ້າ, ແລະກະສັດໄດ້ສົ່ງພວກເຂົາໃຫ້ໄປຕິດຕາມກອງທັບຂອງຊາວອາຣາມ,
ໂດຍກ່າວວ່າ, "ຈົ່ງໄປແລະເບິ່ງ."[15]ພວກເຂົາທັງຫລາຍຈຶ່ງໄດ້ຕິດຕາມພວກເຂົາໄປຕາມແມ່ນ້ຳຈໍແດນ, ແລະ
ທຸກຖະຫນົນຫົນທາງເຕັມໄປດ້ວຍເຄື່ອງນຸ່ງຫົ່ມ ແລະ ອຸປະກອນຕ່າງໆທີ່ຊາວອາຣາມໄດ້ຖິ້ມເພາະຄວາມຮີບດ່ວນຂອງພວກເຂົາ.
ດັ່ງນັ້ນຜູ້ສົ່ງຂ່າວຈຶ່ງໄດ້ກັບມາ ແລະ ກ່າວກັບກະສັດ.
[16]ປະຊາຊົນກໍໄດ້ອອກໄປ ແລະຮິບເອົາເຄື່ອງຂອງໃນຄ້າຍທະຫານຂອງຊາວອາຣາມ. ດັ່ງນັ້ນ,
ແປ້ງຢ່າງດີໄດ້ຖືກຂາຍໃນລາຄາຖັງລະຫນຶ່ງເຊກຽນ ແລະ ເຂົ້າບາເລສອງຖັງຂາຍຫນຶ່ງເຊກຽນ ຕາມຖ້ອຍຄຳທີ່ພຣະຢາເວໄດ້ກ່າວໄວ້.
[17]ກະສັດໄດ້ສັ່ງນາຍທະຫານຄົນສະຫນິດໃຫ້ເປັນຜູ້ຮັບຜິດຊອບເຝົ້າປະຕູເມືອງ, ແລະປະຊາຊົນໄດ້ຢຽບໄປເທິງເຂົາທີ່ປະຕູ.
ເຂົາໄດ້ຕາຍດັ່ງທີ່ຄົນຂອງພຣະເຈົ້າໄດ້ກ່າວໄວ້, ໃນເວລາທີ່ກະສັດໄດ້ລົງມາຫາເຂົາ.
[18]ດັ່ງນັ້ນ ສິ່ງນີ້ກໍໄດ້ເກີດຂຶ້ນດັ່ງທີ່ຄົນຂອງພຣະເຈົ້າໄດ້ບອກກັບກະສັດ, ກ່າວວ່າ, "ປະມານເວລານີ້ຢູ່ໃນປະຕູເມືອງຊາມາເຣຍ,
ເຂົ້າບາເລສອງຖັງຈະຂາຍຫນຶ່ງເຊກຽນ, ແລະ ມີແປ້ງຢ່າງດີຫນຶ່ງຖັງຂາຍຫນຶ່ງເຊກຽນ".[19]ນາຍທະຫານກໍໄດ້ຕອບຄົນຂອງພຣະເຈົ້າ ແລະ
ກ່າວວ່າ, "ເບິ່ງແມ, ຖ້າແມ່ນພຣະຢາເວໄດ້ສ້າງປ່ອງຢ້ຽມໃນທ້ອງຟ້າ, ສິ່ງນີ້ຈະສາມາດເກີດຂຶ້ນໄດ້ບໍ?" ເອລີຊາໄດ້ກ່າວວ່າ, "ເບິ່ງເອົາເຖີດ,
ທ່ານຈະສັງເກດເບິ່ງມັນເກີດຂຶ້ນດ້ວຍຕາຂອງທ່ານເອງ, ແຕ່ທ່ານຈະບໍ່ໄດ້ກິນຫຍັງເລີຍ."[20]ເຫດການນີ້ກໍໄດ້ເກີດຂຶ້ນກັບເຂົາເອງແທ້,
ເພາະວ່າປະຊາຊົນໄດ້ຢຽບເຂົາທີ່ປະຕູເມືອງ, ແລະ ເຂົາໄດ້ຕາຍເສຍ.

 generated on Tue Jun 17 19:01:42 2025

# 8

[1]ບັດນີ້ ເອລີຊາໄດ້ເວົ້າກັບຜູ້ຍິງທີ່ລູກຊາຍຂອງລາວໄດ້ກັບຄືນມາມີຊີວິດອີກ. ທ່ານໄດ້ກ່າວກັບນາງວ່າ, "ຈົ່ງລຸກຂຶ້ນແລະໄປພ້ອມກັບຄອບຄົວ, ແລະອາສັຍຢູ່ແຜ່ນດິນອື່ນທີ່ເຈົ້າສາມາດຢູ່ໄດ້, ເພາະວ່າພຣະຢາເວ
ໄດ້ບັນດານໃຫ້ເກີດຄວາມອຶດຢາກອາຫານມາສູ່ແຜ່ນດິນນີ້ເປັນເວລາເຈັດປີ."[2]ດັ່ງນັ້ນຍິງຄົນນັ້ນກໍໄດ້ລຸກຂຶ້ນແລະນາງໄດ້ເຊື່ອຟັງຖ້ອຍຄຳຂອງຄົນຂອງພຣະເຈົ້າ.
ນາງໄດ້ໄປຢູ່ກັບຄອບຄົວແລະອາສັຍຢູ່ໃນແຜ່ນດິນຟີລິສະຕິນເຈັດປີ.

[3]ສິ່ງນີ້ໄດ້ເກີດຂຶ້ນເມື່ອທ້າຍປີທີເຈັດ ແລະຍິງຄົນນັ້ນກໍໄດ້ກັບມາຈາກແຜ່ນດິນຟີລິສະຕິນ,
ແລະນາງໄດ້ໄປຫາກະສັດເພື່ອທູນຂໍເຮືອນແລະທີ່ດິນຂອງນາງຄືນ.[4]ບັດນີ້ກະສັດໄດ້ຊຶ່ງກຳລັງກ່າວກັບເກຮາຊີຜູ້ຮັບໃຊ້ຄົນຂອງພຣະເຈົ້າ,
ໂດຍກ່າວວ່າ, "ຈົ່ງບອກເຮົາເຖິງສິ່ງທີ່ຍິ່ງໃຫຍ່ທຸກຢ່າງທີ່ເອລີຊາໄດ້ກະທຳ."
[5]ໃນຂະນະທີ່ເຂົາກຳລັງກ່າວກັບກະສັດ ເລື່ອງທີ່ເອລີຊາໄດ້ຊຸບຊີວິດຂອງເດັກທີ່ຕາຍແລ້ວ, ຜູ້ຍິງຄົນທີ່ທ່ານໄດ້ຊຸບຊີວິດລູກຊາຍຂອງນາງໄດ້ມາ
ໄດ້ມາຮ້ອງທູນຕໍ່ກະສັດເພື່ອຂໍເຮືອນແລະທີ່ດິນຂອງນາງຄືນ. ເກຮາຊີໄດ້ກ່າວວ່າ, "ຂ້າແດ່ກະສັດ ເຈົ້ານາຍຂອງຂ້ານ້ອຍ,
ນີ້ແມ່ນຜູ້ຍິງຄົນນັ້ນແທ້ໆ, ແລະນີ້ແມ່ນລູກຊາຍຂອງນາງ,
ເຊິ່ງເອລີຊາໄດ້ເຮັດໃຫ້ເປັນຄືນມາສູ່ຊີວິດ."[6]ເມື່ອກະສັດໄດ້ຖາມຜູ້ຍິງນັ້ນກ່ຽວກັບລູກຊາຍຂອງນາງ, ນາງໄດ້ກ່າວກັບພະອົງ.
ດັ່ງນັ້ນກະສັດຈຶ່ງສັ່ງໃຫ້ນາຍທະຫານຄົນຫນຶ່ງມາຫານາງໂດຍກ່າວວ່າ, "ຈົ່ງມອບທຸກສິ່ງທີ່ເປັນຂອງນາງໃຫ້ນາງ ແລະ
ພ້ອມທັງຜົດຜົນທັງຫມົດຂອງນາງ ຕັ້ງແຕ່ມື້ທີ່ນາງໄດ້ອອກຈາກແຜ່ນດິນມາຈົນເຖິງດຽວນີ້."
[7]ເອລີຊາ ໄດ້ມາຍັງເມືອງດາມັສກັດ ບ່ອນທີ່ເບັນຮາດາດກະສັດແຫ່ງອາຣາມປ່ວຍ. ແລະມີຄົນໄດ້ທູນກະສັດໄດ້ກ່າວວ່າ,
"ຄົນຂອງພຣະເຈົ້າໄດ້ມາທີ່ນີ້."[8]ກະສັດໄດ້ກ່າວກັບຮາຊາເອນວ່າ,“ ຈົ່ງນຳເອົາຂອງຂວັນ ແລະ ໄປພົບກັບຄົນຂອງພຣະເຈົ້າ,
ແລະທູນຖາມພຣະຢາເວໂດຍຜ່ານເພິ່ນ, ໂດຍກ່າວວ່າ,“ ເຮົາຈະຫາຍດີຈາກພະຍາດນີ້ບໍ?”[9]ດັ່ງນັ້ນ ຮາຊາເອນຈຶ່ງໄປພົບທ່ານ ແລະ
ນຳເອົາຂອງຂວັນໄປດ້ວຍ ທຸກສິ່ງຄືສິ່ງທີ່ດີຂອງເມືອງດາມັສກັດ, ຊຶ່ງໄດ້ບັນທຸກໂດຍອູດສີ່ສິບໂຕ.
ດັ່ງນັ້ນຮາຊາເອນຈຶ່ງມາແລະຢືນຢູ່ຕໍ່ຫນ້າເອລີຊາ ແລະ ກ່າວວ່າ, "ກະສັດເບັນຮາດາດກະສັດແຫ່ງອາຣາມ ໄດ້ສົ່ງຂ້ານ້ອຍມາຫາທ່ານ,
ຖາມວ່າ," ເຮົາຈະຫາຍດີຈາກພະຍາດນີ້ບໍ?"'
[10]ເອລີຊາໄດ້ຕອບເຂົາວ່າ, "ຈົ່ງໄປບອກເບັນຮາດາດວ່າ, 'ທ່ານຈະຫາຍດີຈາກການປ່ວຍແນ່ນອນ, ແຕ່ພຣະຢາເວ
ໄດ້ຊົງສະແດງໃຫ້ຂ້າພະເຈົ້າເຫັນວ່າພະອົງຈະເສຍຊີວິດແນ່ນອນ."[11]ແລ້ວເອລີຊາໄດ້ແນມເບິ່ງຮາຊາເອນຈົນເຂົາຮູ້ສຶກອາຍ,
ແລະຄົນຂອງພຣະເຈົ້າກໍໄດ້ຮ້ອງໄຫ້.[12]ຮາຊາເອນຈຶ່ງຖາມວ່າ,“ ເປັນຫຍັງເຈົ້ານາຍຂອງຂ້ານ້ອຍຈຶ່ງຮ້ອງໄຫ້?” ທ່ານໄດ້ຕອບວ່າ,
"ເພາະວ່າເຮົາຮູ້ເຖິງຄວາມຊົ່ວຮ້າຍທີ່ທ່ານຈະກະທຳຕໍ່ຊາວອິສະຣາເອນ. ທ່ານຈະເອົາໄຟເຜົາປ້ອມກອງກຳລັງຂອງພວກເຂົາ,
ແລະທ່ານຈະຂ້າຄົນຫນຸ່ມດ້ວຍດາບ, ຈັບເດັກນ້ອຍຟາດຈົນມຸ່ນ, ແລະຜ່າທ້ອງຜູ້ຍິງຖືພາເສຍ."
[13]ຮາຊາເອນໄດ້ຕອບວ່າ, "ຄົນຮັບໃຊ້ຂອງທ່ານແມ່ນໃຜ, ທີ່ຈະເຮັດສິ່ງທີ່ຍິ່ງໃຫຍ່ນີ້ບໍ? ເຂົາເປັນພຽງຫມາເທົ່ານັ້ນ." ເອລີຊາໄດ້ຕອບວ່າ,
"ພຣະຢາເວໄດ້ສະແດງໃຫ້ຂ້າພະເຈົ້າເຫັນວ່າທ່ານຈະເປັນກະສັດປົກຄອງເມືອງອາຣາມ."[14]ຫລັງຈາກນັ້ນ, ຮາຊາເອນກໍໄດ້ໄປຈາກເອລີຊາ
ແລະເຂົ້າຫາເຈົ້ານາຍຂອງເຂົາ, ຜູ້ຊຶ່ງຖາມເຂົາວ່າ, "ເອລີຊາໄດ້ເວົ້າຫຍັງກັບເຈົ້າ?" ເຂົາໄດ້ຕອບວ່າ, "ທ່ານໄດ້ບອກຂ້ານ້ອຍວ່າ
ພະອົງຈະຊົງດີຈາກການເຈັບປ່ວຍແນ່ນອນ."[15]ມື້ຕໍ່ມາ ຮາຊາເອນ ໄດ້ເອົາຜ້າຫົ່ມມາຈຸ່ມລົງນ້ຳ, ແລະ
ເອົາລົງໄປຄຸມທີ່ຫນ້າຂອງເບັນຮາດາດຈົນພະອົງເສຍຊີວິດ. ແລ້ວ ຮາຊາເອນກໍໄດ້ຂຶ້ນເປັນກະສັດແທນ.
[16]ໃນປີທີຫ້າຂອງຣາຊການໂຢຣາມ ລູກຊາຍຂອງກະສັດອາຮາບກະສັດແຫ່ງອິສະຣາເອນ, ກະສັດເຢໂຮຣາມເລີ່ມຂຶ້ນປົກຄອງແທນ.
ທ່ານເປັນລູກຊາຍຂອງກະສັດເຢໂຮຊາຟັດກະສັດແຫ່ງຢູດາ. ທ່ານເລີ່ມປົກຄອງເມື່ອກະສັດເຢໂຮຊາຟັດເປັນກະສັດແຫ່ງຢູດາ.
[17]ເຢໂຮຣາມມີອາຍຸໄດ້ສາມສິບສອງປີ ເມື່ອໄດ້ເລີ່ມຂຶ້ນປົກຄອງເມືອງ ແລະ ພະອົງໄດ້ຂຶ້ນປົກຄອງເມືອງຢູ່ທີ່ກຸງເຢຣູຊາເລັມແປດປີ.
[18]ເຢໂຮຣາມໄດ້ດຳເນີນຕາມແນວທາງຂອງບັນດາກະສັດແຫ່ງອິສະຣາເອນ, ຄືກັນກັບກະສັດອາຮາບໄດ້ກະທຳ;
ເພາະລູກສາວຂອງອາຮາບເປັນເມຍຂອງພະອົງ, ແລະພະອົງໄດ້ກະທຳສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ.[19]ຢ່າງໃດກໍຕາມ,
ເພາະໄດ້ຊົງເຫັນແກ່ດາວິດ, ຜູ້ຮັບໃຊ້ຂອງພຣະອົງ, ພຣະຢາເວບໍ່ໄດ້ມີຈຸດປະສົງທີ່ຈະທຳລາຍຢູດາ, ເຫດທີ່ພຣະອົງໄດ້ກ່າວແກ່ເຂົາວ່າ
ຈະຊົງປຣະທານເຊື້ອສາຍໃຫ້ແກ່ພະອົງຕະຫລອດໄປ.
[20]ໃນຣາຊການຂອງເຢໂຮຣາມ, ເອໂດມໄດ້ກະບົດ ບໍ່ຍອມຢູ່ໃຕ້ອຳນາດຂອງຢູດາ, ແລະ ພວກເຂົາໄດ້ຕັ້ງກະສັດປົກຄອງເຫນືອເຂົາເອງ.
[21]ແລ້ວເຢໂຮຣາມ ຈຶ່ງໄດ້ຍົກທັບ ພ້ອມບັນດາແມ່ທັບ ແລະ ຣົດມ້າທັງຫມົດຂອງພະອົງ.
ເຫດການນີ້ໄດ້ເກີດຂຶ້ນເມື່ອພະອົງໄດ້ລຸກຂຶ້ນໃນຕອນກາງຄືນ ແລະ ຖືກໂຈມຕີແລະ ຖືກປິດລ້ອມຈາກຊາວເອໂດມ, ຊຶ່ງຜູ້ທີ່ໄດ້ມາປິດລ້ອມພະອົງ
ແລະ ບັນດາຜູ້ບັນຊາການຂອງຣົດມ້າ. ຈາກນັ້ນກອງທັບຂອງກະສັດເຢໂຮຣາມໄດ້ຫນີກັບເຂົ້າໄປໃນບ້ານເມືອງຂອງພວກເຂົາໄດ້.
[22]ດັ່ງນັ້ນ ເອໂດມຈຶ່ງໄດ້ກະບົດ ຕໍ່ຕ້ານການປົກຄອງຂອງຢູດາຈົນເຖິງທຸກວັນນີ້. ແລ້ວລິບນາກໍໄດ້ກະບົດໃນເວລາດຽວກັນ.
[23]ສ່ວນພາຣະກິດອື່ນໆຂອງເຢໂຮຣາມ, ທຸກສິ່ງທີ່ທ່ານໄດ້ກະທຳ, ແມ່ນບໍ່ໄດ້ຖືກຂຽນໄວ້ໃນປຶ້ມບັນທຶກເຫດການຕ່າງໆຂອງກະສັດຢູດາ?
[24]ເຢໂຮຣາມໄດ້ລ່ວງລັບໄປ ແລະ ໄດ້ພັກສະຫງົບຢູ່ກັບບັນພະບຸຣຸດຂອງພະອົງ, ແລະໄດ້ຖືກຝັງໄວ້ກັບບັນພະບຸຣຸດຂອງທ່ານທີ່ເມືອງດາວິດ.
ແລ້ວອາຮາຊີຢາລູກຊາຍຂອງພະອົງໄດ້ຂຶ້ນເປັນກະສັດແທນ.
[25]ໃນປີທີສິບສອງແຫ່ງຣາຊການຂອງໂຢຣາມລູກຊາຍຂອງອາຮາບ, ກະສັດແຫ່ງອິສະຣາເອນ,
ອາຮາຊີຢາລູກຊາຍຂອງເຢໂຮຣາມກະສັດແຫ່ງຢູດາ, ໄດ້ຂຶ້ນປົກຄອງແທນ.[26]ອາຮາຊີຢາມີອາຍຸໄດ້ຊາວສອງປີ ຕອນພະອົງເລີ່ມປົກຄອງ;
ພະອົງປົກຄອງເປັນເວລາຫນຶ່ງປີໃນກຸງເຢຣູຊາເລັມ. ແມ່ຂອງເພິ່ນຊື່ວ່າອາທາລີຢາ; ນາງເປັນລູກສາວຂອງອົມຣີ, ກະສັດແຫ່ງອິສະຣາເອນ.
[27]ອາຮາຊີຢາດຳເນີນຕາມເສັ້ນທາງຂອງຣາຊວົງອາຮາບ; ພະອົງໄດ້ກະທຳສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ,
ດັ່ງທີ່ເຊື້ອສາຍຂອງອາຮາບກະທຳ, ເພາະອາຮາຊີຍຢາເປັນລູກເຂີຍຂອງຣາຊະວົງອາຮາບ.
[28]ອາຮາຊີຢາໄດ້ເດີນທາງໄປກັບໂຢຣາມລູກຊາຍຂອງອາຮາບ, ເພື່ອເຮັດສົງຄາມກັບຮາຊາເອນ, ກະສັດແຫ່ງອາຣາມ, ທີ່ເມືອງຣາໂມດ
ກີເລອາດ. ຊາວອາຣາມໄດ້ກະທຳໃຫ້ໂຢຣາມໄດ້ຮັບບາດເຈັບ.[29]ກະສັດໂຢຣາມໄດ້ກັບຄືນມາຮັບການຮັກສາທີ່ເມືອງຢິດຊະເຣເອນ

ທີ່ເກີດຈາກຄົນອາຣາມໄດ້ເຮັດແກ່ພະອົງທີ່ຣາມາ, ໃນເວລາທີ່ພະອົງໄດ້ຕໍ່ສູ້ຮາຊາເອນ ກະສັດແຫ່ງອາຣາມ.
ດັ່ງນັ້ນອາຮາຊີຢາລູກຊາຍຂອງເຢໂຮຣາມ, ກະສັດແຫ່ງຢູດາ, ໄດ້ລົງໄປຫາໂຢຣາມລູກຊາຍຂອງອາຮາບ, ເພາະວ່າໂຢຣາມໄດ້ຮັບບາດເຈັບ.


generated on Tue Jun 17 19:01:42 2025

9 [1]ເອລີຊາຜູ້ທຳນວຍໄດ້ເອີ້ນຄົນຫນຶ່ງໃນພວກລູກຊາຍຂອງຜູ້ທຳນວາຍ ແລະກ່າວກັບລາວວ່າ,“ ຈົ່ງແຕ່ງຕົວເພື່ອເດີນທາງ,
ແລ້ວຖືນ້ຳມັນຂວດນ້ອຍນີ້ໄວ້ໃນມືຂອງເຈົ້າ ແລະໄປທີ່ເມືອງ ຣາໂມດ ກີເລອາດ.[2]ເມື່ອເຈົ້າເຖິງທີ່ນັ້ນແລ້ວ,
ຈົ່ງຫລຽວຫາຢາຮູລູກຊາຍຂອງເຢໂຮຊາຟັດ ລູກຊາຍຂອງນິມຊີ, ແລະຈົ່ງເຂົ້າໄປຂ້າງໃນ ແລະໃຫ້ລາວລຸກຂຶ້ນຈາກຫມູ່ຂອງລາວ,
ແລະພາລາວໄປທີ່ຫ້ອງຊັ້ນໃນ.[3]ແລ້ວຈົ່ງເອົານ້ຳມັນໃນຂວດໄປ ແລະເທລົງເທິງຫົວຂອງລາວແລະເວົ້າວ່າ," ພຣະຢາເວກ່າວດັ່ງນີ້ວ່າ:
"ເຮົາເຈີມຕັ້ງເຈົ້າໃຫ້ເປັນກະສັດເຫນືອອິສະຣາເອນ."' ແລ້ວຈົ່ງເປີດປະຕູ, ແລະແລ່ນອອກໄປ; ຢ່າຊັກຊ້າ."

[4]ດ້ວຍເຫດນີ້ຊາຍຫນຸ່ມຜູ້ນັ້ນ, ຄືຜູ້ທຳນວາຍຫນຸ່ມ, ຈຶ່ງໄດ້ໄປທີ່ ຣາໂມ ກີເລອາດ.[5]ເມື່ອລາວໄປຮອດ, ເບິ່ງແມ, ບັນດານາຍທະຫານກຳລັງນັ່ງຢູ່.
ດັ່ງນັ້ນຜູ້ທຳນວາຍຫນຸ່ມໄດ້ກ່າວວ່າ, "ທ່ານຜູ້ບັນຊາການ, ຂ້ານ້ອຍນຳຂ່າວມາເຖິງທ່ານ,"ເຢຮູໄດ້ເວົ້າວ່າ,"ມາເຖິງໃຜໃນພວກເຮົາ?"
ຜູ້ທຳນວາຍຫນຸ່ມຕອບວ່າ, "ມາເຖິງທ່ານ, ຜູ້ບັນຊາການ."[6]ດັ່ງນັ້ນເຢຮູຈຶ່ງລຸກຂຶ້ນແລະເຂົ້າໄປໃນເຮືອນ
ແລະຜູ້ທຳນວາຍໄດ້ເອົານ້ຳມັນລົງເທິງຫົວຂອງລາວ ແລະ ກ່າວກັບເຢຮູວ່າ, "ພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ກ່າວດັ່ງນີ້:
ເຮົາໄດ້ເຈີມຕັ້ງເຈົ້າໄວ້ເປັນກະສັດເຫນືອປະຊາຊົນຂອງພຣະຢາເວ, ຄືເຫນືອຄົນອິສະຣາເອນ.
[7]ເຈົ້າຕ້ອງຂ້າຄອບຄົວຂອງອາຮາບນາຍຂອງເຈົ້າ, ເພື່ອເຮົາຈະແກ້ແຄ້ນໃຫ້ເລືອດຂອງຜູ້ຮັບໃຊ້ຂອງເຮົາຄືບັນດາຜູ້ທຳນວາຍ, ແລະ
ເລືອດຂອງຜູ້ຮັບໃຊ້ທັງຫມົດຂອງພຣະເຢວາ, ຜູ້ທີ່ຖືກຂ້າໂດຍມືຂອງເຢຊາເບນ.[8]ເພາະວ່າຄອບຄົວ ຂອງອາຮາບທັງຫມົດ ຈະຕ້ອງພິນາດ, ແລະ
ເຮົາຈະກຳຈັດລູກຊາຍທຸກຄົນເສຍຈາກອາຮາບ, ບໍ່ວ່າຄົນນັ້ນຈະເປັນຂ້າທາດ ຫລື ຄົນມີອິສຣະ.
[9]ເຮົາຈະເຮັດໃຫ້ຄອບຄົວຂອງອາຮາບ ເປັນເຫມືອນຄອບຄົວຂອງ ເຢໂຣໂບອາມ ລູກຊາຍຂອງເນບັດ ແລະ ຄືກັບຄອບຄົວຂອງ ບາອາຊາ
ລູກຊາຍຂອງອາຮີຢາ.[10]ພວກຫມາຈະກິນ ເຢເຊເບນໃນ ຢິດຊາເລນ, ແລະ ຈະບໍ່ມີໃຜຝັງສົບນາງ. '"ແລ້ວຜູ້ທຳນວາຍໄດ້ເປີດປະຕູ
ແລະແລ່ນຫນີໄປ.
[11]ເມື່ອເຢຮູອອກໄປຫາຜູ້ຮັບໃຊ້ຂອງນາຍຂອງລາວ, ແລະຄົນຫນຶ່ງ ຖາມລາວວ່າ: "ທຸກຢ່າງຮຽບຮ້ອຍດີບໍ?
ເປັນຫຍັງຄົນບ້າຄົນນີ້ຈຶ່ງມາຫາເຈົ້າ?" ເຢຮູໄດ້ຕອບພວກເຂົາວ່າ, "ພວກເຈົ້າຮູ້ຈັກຊາຍຄົນນັ້ນແລະສິ່ງທີ່ເຂົາເວົ້າແລ້ວ."[12]ພວກເຂົາເວົ້າວ່າ,
"ນັ້ນແມ່ນຄຳຕົວະ. ບອກພວກເຮົາມາເຖີດ." ເຢຮູໄດ້ຕອບວ່າ, "ລາວໄດ້ເວົ້າແນວນີ້ແລະສິ່ງນັ້ນກັບຂ້ອຍ, ແລະລາວຍັງເວົ້າອີກວ່າ,"
ພຣະຢາເວກ່າວດັ່ງນີ້ວ່າ: ເຮົາໄດ້ເຈີມ
ຕັ້ງເຈົ້າໃຫ້ເປັນກະສັດປົກຄອງອິສະຣາເອນ.'"[13]ແລ້ວພວກເຂົາແຕ່ລະຄົນກໍໄດ້ຮີບເອົາເຄື່ອງແຕ່ງກາຍທີ່ສວມຂ້າງນອກຂອງພວກເຂົາອອກມາ
ແລະປູໃຫ້ເຢຮູຢຽບທີ່ບັນໄດຂັ້ນເທິງສຸດ. ພວກເຂົາເປົ່າເຂົາສັດແລະເວົ້າວ່າ, "ເຢຮູເປັນກະສັດ."
[14]ດ້ວຍວິທີນີ້ ເຢຮູ ລູກຊາຍຂອງເຢໂຮຊາຟັດລູກຊາຍຂອງ ນິມຊີ ສົມຮູ້ຮ່ວມຄິດກັບຄົນອື່ນຄິດກະບົດຕໍ່ໂຢຣາມ.
ຕອນນີ້ໂຢຣາມໄດ້ປ້ອງກັນເມືອງ ຣາໂມດກີເລອາດ, ລາວແລະຊາວອິສະຣາເອນ, ທັງຫມົດໄວ້ຈາກຮາຊາເອນກະສັດແຫ່ງອາຣາມ,
[15]ແຕ່ກະສັດໂຢຣາມ ໄດ້ກັບໄປທີ່ຢິດຊາເຣນເພື່ອຮັບການຮັກສາບາດແຜທີ່ຊາວອາຣາມທຳຮ້າຍລາວ, ໃນເວລາທີ່ລາວໄດ້ຕໍ່ສູ້ກັບກະສັດ
ຮາຊາເອນແຫ່ງເອຣາມ. ເຢຮຸນຈຶ່ງໄດ້ເວົ້າກັບຜູ້ຮັບໃຊ້ຂອງໂຢຣາມວ່າ, "ຖ້ານີ້ເປັນຄວາມປະສົງຂອງທ່ານ,
ກໍຢ່າປ່ອຍໃຫ້ຜູ້ໃດຫນີແລະອອກຈາກເມືອງ, ເພື່ອຈະໄປບອກຂ່າວນີ້ໃນເມືອງ ຢິດຊາເຣນໄດ້."[16]ດັ່ງນັ້ນ ເຢຮູໄດ້
ຂີ່ຣົດມ້າເສິກໄປຍັງຢິດຊະເຣນ; ສຳລັບ ໂຢຣາມກຳລັງພັກຜ່ອນຢູ່ທີ່ນັ້ນ. ບັດນີ້ອາຮາຢາກະສັດແຫ່ງຢູດາໄດ້ລົງມາເບິ່ງໂຢຣາມ.
[17]ທະຫານຍາມກຳລັງຢືນຢູ່ເທິງຫໍຄອຍໃນ ຢິດຊາເຣນ, ແລະລາວໄດ້ເຫັນກຸ່ມຂອງເຢຮູເມື່ອລາວມາທາງໄກ; ລາວເວົ້າວ່າ,
"ຂ້ອຍເຫັນກຸ່ມຜູ້ຊາຍກຳລັງມາ." ໂຢຣາມໄດ້ກ່າວວ່າ, "ຈົ່ງໃຊ້ຄົນຂີ່ມ້າໄປ, ແລະສົ່ງລາວອອກໄປພົບພວກເຂົາ; ແລະໃຫ້ຖາມເຂົາວ່າ,"
ທ່ານມາຢ່າງສັນຕິບໍ?'"[18]ດັ່ງນັ້ນລາວໄດ້ສົ່ງຊາຍຄົນຫນຶ່ງຂີ່ມ້າໄປພົບເຂົາ; ເຂົາໄດ້ເວົ້າວ່າ," ກະສັດກ່າວດັ່ງນີ້ວ່າ: ທ່ານມາຢ່າງສັນຕິບໍ?'"
ດັ່ງນັ້ນເຢຮູໄດ້ຕອບວ່າ," ທ່ານກ່ຽວຂ້ອງອັນໃດກັບສັນຕິ? ຈົ່ງລ້ຽວກັບຕາມເຮົາມາ." ແລ້ວທະຫານຜູ້ເຝົ້າຍາມໄດ້ບອກກະສັດວ່າ,
"ຜູ້ນຳຂ່າວໄດ້ພົບກັບພວກເຂົາ, ແຕ່ລາວບໍ່ໄດ້ກັບມາອີກ."
[19]ແລ້ວທ່ານໄດ້ສົ່ງຄົນທີສອງຂີ່ມ້າອອກໄປ, ຜູ້ທີ່ມາຫາພວກເຂົາແລະເວົ້າວ່າ,“ ກະສັດກ່າວດັ່ງນີ້ວ່າ: 'ເຈົ້າມາຢ່າງສັນຕິບໍ?'" ເຢຮູຕອບວ່າ,
"ເຈົ້າກ່ຽວຂ້ອງອັນໃດກັບສັນຕິ? ຈົ່ງລ້ຽວກັບແລະຕາມເຮົາມາ."[20]ອີກຄັ້ງນັກເຝົ້າຍາມກໍໄດ້ລາຍງານວ່າໄດ້ລາຍງານວ່າ,
"ລາວໄດ້ພົບກັບພວກເຂົາ, ແຕ່ລາວບໍ່ກັບມາອີກ. ວິທີການຂັບລົດມ້ານັ້ນກໍໄດ້ເຫມືອນກັບການຂັບຣົດມ້າຂອງ ເຢຮູລູກຊາຍຂອງ ນິມຊີ;
ລາວກຳລັງຂັບຣົດຢ່າງໂຫດຮ້າຍ."
[21]ດັ່ງນັ້ນໂຢຣາມໄດ້ກ່າວວ່າ,“ ຈົ່ງກຽມຣົດຮົບຂອງເຮົາໄວ້ເຖີນ.” ພວກເຂົາໄດ້ກຽມຣົດຮົບຂອງລາວ,
ແລະໂຢຣາມກະສັດແຫ່ງອິສະຣາເອນແລະອາຮາຊີຢາກະສັດແຫ່ງຢູດາໄດ້ຂີ່ຣົດມ້າ, ແຕ່ລະຄົນກໍໄດ້ຢູ່ໃນຣົດຮົບຂອງລາວ, ເພື່ອພົບກັບເຢຮູ.
ພວກເຂົາທັງສອງໄດ້ພົບລາວຢູ່ທີ່ ທີ່ດິນຂອງນາໂບດຊາວຢິດຊະເຣນ.[22]ເມື່ອ ໂຢຣາມໄດ້ຫລຽວເຫັນຢາຮູແລ້ວ, ເພິ່ນຈຶ່ງໄດ້ກ່າວວ່າ, "ເຢຮູ
ມາຢ່າງສັນຕິຫລືບໍ່?" ເຢຮູຕອບວ່າ, "ຈະມີສັນຕິໄດ້ຢ່າງໃດ, ເມື່ອການນອກໃຈໂດຍການບູຊາຮູບເຄົາຣົບແລະການຝຶກເວດມົນຄາຖາຂອງ
ເຊເບນແມ່ຂອງທ່ານຍັງມີ ຢູ່ຫລວງຫລາຍເຊັ່ນນີ້?"
[23]ດັ່ງນັ້ນໂຢຣາມໄດ້ຊິງຊັກບັງຫຽນຣົດມ້າຮົບຫັນກັບ ແລະ ຫນີໄປ ແລະເວົ້າກັບ ອາຮາຊີຢາວ່າ, "ອາຮາຊີຢາ,
ມີກະບົດ[24]ແລ້ວເຢຮູກໍໄດ້ກົ່ງທະນູຂອງເຂົາດ້ວຍສຸດກຳລັງຂອງຕົນແລະໄດ້ຍິງຖືກໂຢຣາມລະຫວ່າງບ່າຂອງທ່ານ;
ລູກທະນູໄດ້ຜ່ານຫົວໃຈຂອງລາວ, ແລະລາວໄດ້ລົ້ມລົງໄປໃນຣົດຮົບຂອງລາວ.
[25]ຜູ້ບັນຊາການທະຫານວ່າ,“ ຈົ່ງຍົກລາວຂຶ້ນແລະໂຍນຖິ້ມລົງໄປໃນທີ່ດິນທົ່ງຂອງນາໂບດຊາວຢິດຊະເຣນ.
ຂໍໃຫ້ຄິດເຖິງເມື່ອເຮົາກັບເຈົ້າໄດ້ຂີ່ມ້າຮຽງກັນມາ ໃຫ້ທ່ານຕາມອາຮາບພໍ່ຂອງທ່ານໄປ, - ພຣະຢາເວໄດ້ຊົງກ່າວໂທດທ່ານວ່າ:
[26]ເມື່ອວານນີ້ເຮົາໄດ້ເຫັນເລືອດຂອງນາໂບດ ແລະເລືອດຂອງລູກຊາຍຂອງເຂົາ ພຣະຢາເວກ່າວວ່າ
ແລະເຮົາຈະໄດ້ຕອບສະຫນອງເຈົ້າເທິງທີ່ດິນຕອນນີ້ແຫລະ ພຣະຢາເວກ່າວ. ບັດນີ້ຈົ່ງຍົກເຂົາຂຶ້ນ,
ແລະໂຍນເຂົາຖິ້ມໄວ້ເທິງທີ່ດິນຕອນນີ້ແຫລະ, - ຕາມຖ້ອຍຄຳ ຂອງພຣະຢາເວ."
[27]ເມື່ອອາຮາຊີຢາກະສັດແຫ່ງໄດ້ຢູດາເຫັນເຫດການນີ້, ເພິ່ນກໍໄດ້ຫນີໄປຕາມທາງໄປທາງເມືອງເບັດຮາກາ. ແຕ່ ເຢຮູ ໄດ້ຕິດຕາມເພິ່ນໄປ,
ແລະກ່າວວ່າ, "ຈົ່ງຂ້າລາວໃນຣົດຮົບ," ແລະພວກເຂົາກໍຍິງລາວຢູ່ບ່ອນສູງຂອງເມືອງ ກຸດ, ເຊິ່ງຢູ່ໃກ້ເມືອງລິບເລອາມ.

 generated on Tue Jun 17 19:01:42 2025

ອາຮາຊີຢາໄດ້ປົບຫນີໄປທີ່ເມກິດໂດແລະຕາຍຢູ່ທີ່ນັ້ນ.
28ພວກຜູ້ຮັບໃຊ້ຂອງທ່ານໄດ້ນຳເອົາຊາກສົບຂອງທ່ານໃສ່ຣົດຮົບໄປທີ່ກຸງເຢຣູຊາເລັມແລະໄດ້ຝັງສົບເພິ່ນໄວ້ໃນອຸບໂມງຝັງສົບກັບບັນພະບຸຣຸດຂອງເພິ່ນໃນເມືອງດາ
29ບັດນີ້ ໃນປີທີສິບເອັດແຫ່ງຣາຊການໂຢຣາມລູກຊາຍຂອງອາຮາບທີ່ອາຮາຊີຢາໄດ້ຂຶ້ນປົກຄອງເຫນືອຢູດາ.
30ເມື່ອ ເຢຮູໄດ້ມາຮອດ ເມືອງຢິດຊະເຣນ, ເຢເຊເບນໄດ້ຊິ່ງຮູ້ເລື່ອງ, ແລະນາງກໍໄດ້ແຕ້ມຕາຂອງນາງ, ໄດ້ແຕ່ງຜົມຂອງນາງ,
ແລະເບິ່ງອອກຈາກປ່ອງຢ້ຽມ31ເມື່ອເຢຮູໄດ້ຜ່ານປະຕູເຂົ້າມາ, ນາງໄດ້ຖາມລາວວ່າ, "ເຈົ້າມາຢ່າງສັນຕິບໍ, ເຈົ້າຊິມຣີ,
ເຈົ້າຂ້ານາຍຂອງເຈົ້າບໍ?"32ເຢຮູໄດ້ຫລຽວໄປເບິ່ງທີ່ປ່ອງຢ້ຽມແລະໄດ້ເວົ້າວ່າ, "ໃຜຢູ່ຂ້າງຂອງຂ້ອຍແມ່ນໃຜ?" ແລ້ວກໍຊາຍຕອນສອງ
ສາມຄົນຫລຽວເບິ່ງລາວທາງປ່ອງຢ້ຽມ.
33ດັ່ງນັ້ນເຢຮູໄດ້ກ່າວວ່າ, "ຖິ້ມນາງລົງມາ." ດັ່ງນັ້ນພວກເຂົາໄດ້ໂຍນເຢຊາເບນລົງມາ,
ແລະເລືອດຂອງນາງບາງສ່ວນໄດ້ກະແຈກກະຈາຍຢູ່ເທິງຝາແລະມ້າ, ແລະເຢຮູກໍໄດ້ຢຽບຊາກສົບຂອງນາງໄວ້ໃຕ້ຕີນ.
34ເມື່ອເຢຮູໄດ້ເຂົ້າໄປໃນວັງ, ລາວໄດ້ກິນແລະດື່ມ. ແລ້ວໄດ້ເວົ້າວ່າ, "ເບິ່ງດຽວນີ້ກັບແມ່ຍິງທີ່ຖືກສາບແຊ່ງຄົນນີ້ເຖີດ
ຈົ່ງເອົານາງໄປແລະຝັງນາງເສຍ, ເພາະວ່ານາງເປັນທິດາຂອງກະສັດ."
35ພວກເຂົາໄດ້ໄປເພື່ອຈະຝັງສົບນາງ, ແຕ່ພວກເຂົາກໍບໍ່ໄດ້ພົບຫຍັງຫມົດນອກຈາກກະໂຫລກຫົວ, ຕີນ ແລະຝາມືຂອງນາງ.
36ດັ່ງນັ້ນພວກເຂົາກໍກັບມາແລະບອກເຢຮູ. ເຂົາໄດ້ກ່າວວ່າ, "ສິ່ງນີ້ເປັນໄປຕາມຖ້ອຍຄຳ ຂອງພຣະຢາເວ
ຊຶ່ງພຣະອົງໄດ້ກ່າວຜ່ານທາງເອລີຢາຊາວຕີຊະເບ, ຜູ້ຮັບໃຊ້ຂອງພຣະອົງວ່າ, 'ໃນຢິດຊະເຣນ ຫມາ ຈະກິນເນື້ອຫນັງຂອງ ເຢເຊເບນ,
37ແລະສົບຂອງເຢເຊເບນຈະເປັນເຫມືອນຂີ້ສັດເທິງທີ່ດິນຂອງແຜ່ນດິນທີ່ຢິດຊະເຣນ, ເພື່ອວ່າຈະບໍ່ມີໃຜສາມາດເວົ້າໄດ້ວ່າ,"ນີ້ຄືເຢເຊເບນ."'"

 generated on Tue Jun 17 19:01:42 2025

# 10

[1]ຕອນນີ້ອາຮາບມີລູກຫລານເຈັດສິບຄົນຢູ່ໃນເມືອງຊາມາເຣຍ. ເຢຮຸນ ໄດ້ຂຽນຈົດຫມາຍ ແລະ ສົ່ງໄປທີ່ເມືອງຊາມາເຣຍ,
ເຖິງບັນດາຜູ້ປົກຄອງຂອງ ຢິດຊະເຣນ, ລວມທັງຜູ້ເຖົ້າຜູ້ແກ່ແລະ ຜູ້ປົກຄອງເຊື້ອສາຍຂອງອາຮາບ, ໂດຍກ່າວວ່າ,
[2]"ໃນເມື່ອລູກຊາຍຂອງເຈົ້ານາຍຂອງເຈົ້າຢູ່ກັບເຈົ້າ, ແລະ ເຈົ້າຍັງມີຣົດຮົບແລະມ້າແລະເມືອງທີ່ມີກຳລັງເສີມ ແລະປະກອບອາວຸດ. ດັ່ງນັ້ນບັດນີ້,
ເມື່ອຈົດຫມາຍສະບັບນີ້ມາເຖິງເຈົ້າ,[3]ຈົ່ງຄັດເລືອກເອົາລູກຊາຍຂອງນາຍເຈົ້າທີ່ດີທີ່ສຸດແລະ ສົມຄວນທີ່ສຸດ ແລະ
ຕັ້ງລາວໄວ້ເທິງບັນລັງຂອງພໍ່ຂອງເຂົາ, ແລະ ຈົ່ງຕໍ່ສູ້ເພື່ອເຊື້ອສາຍຂອງເຈົ້ານາຍຂອງພວກເຈົ້າ."

[4]ແຕ່ພວກເຂົາຢ້ານແລະເວົ້າກັນວ່າ, "ເບິ່ງແມ, ກະສັດສອງຄົນບໍ່ສາມາດຕ້ານທານເຢຮູໄດ້.
ດັ່ງນັ້ນພວກເຮົາຈະຕ້ານທານໄດ້ຢ່າງໃດ?"[5]ແລ້ວຄົນທີ່ຮັບຜິດຊອບພຣະຣາຊວັງ, ແລະ ຜູ້ທີ່ເປັນຜູ້ປົກຄອງເມືອງ, ແລະ
ພວກຜູ້ເຖົ້າແກ່ພ້ອມທັງຜູ້ທີ່ລ້ຽງດູເດັກນ້ອຍ, ໄດ້ສົ່ງຂ່າວໄປຫາເຢຮູ, ໂດຍກ່າວວ່າ, "ພວກເຮົາເປັນຜູ້ຮັບໃຊ້ຂອງພວກທ່ານ.
ພວກເຮົາຈະເຮັດທຸກຢ່າງທີ່ທ່ານສັ່ງພວກເຮົາ. ພວກເຮົາຈະບໍ່ແຕ່ງຕັ້ງກະສັດຜູ້ໃດເລີຍ. ຂໍເຮັດຕາມສິ່ງທີ່ດີໃນສາຍຕາຂອງທ່ານ."
[6]ແລ້ວເຢຮູ ໄດ້ຂຽນຈົດຫມາຍ ເປັນຄັ້ງທີສອງເຖິງພວກເຂົາ, ໂດຍກ່າວວ່າ, "ຖ້າພວກທ່ານຢູ່ຝ່າຍເຮົາ, ແລະ ຖ້າທ່ານຈະຟັງເຮົາ,
ທ່ານຕ້ອງນຳເອົາຫົວຂອງບັນດາລູກຊາຍນາຍຂອງທ່ານ, ແລະ ມາຫາເຮົາຢູ່ຢິດຊະເຣນໃນມື້ອື່ນນີ້. "ບັດນີ້ບັນດາລູກຫລານຂອງກະສັດ,
ມີເຈັດສິບຄົນ, ໄດ້ຢູ່ກັບພວກຄົນສຳຄັນຂອງເມືອງ, ເຊິ່ງກຳລັງລ້ຽງພວກເຂົາ.[7]ດັ່ງນັ້ນ ເມື່ອຈົດຫມາຍມາເຖິງພວກເຂົາ,
ພວກເຂົາໄດ້ເອົາບັນດາລູກຊາຍຂອງກະສັດ ແລະ ຂ້າພວກເຂົາເຈັດສິບຄົນ,
ເອົາຫົວຂອງພວກເຂົາໃສ່ກະຕ່າແລ້ວສົ່ງໄປໃຫ້ເຢຮູທີ່ເມືອງຢິດຊາເຣນ.
[8]ມີຄົນສົ່ງຂ່າວໄດ້ມາຫາເຢຮູ, ບອກວ່າ," ພວກເຂົາໄດ້ນຳເອົາຫົວບັນດາລູກຊາຍຂອງກະສັດມາແລ້ວ." ດັ່ງນັ້ນລາວເວົ້າວ່າ,
"ຈົ່ງກອງບັນດາຫົວໄວ້ເປັນສອງກອງທີ່ປະຕູເຂົ້າເມືອງຈົນເຖິງຕອນເຊົ້າ."[9]ພໍຕອນເຊົ້າ ເຢຮູໄດ້ອອກໄປ ແລະ ໄດ້ຢືນຢູ່, ແລະ
ໄດ້ເວົ້າກັບປະຊາຊົນທັງຫມົດວ່າ, "ທ່ານທັງຫລາຍເປັນຜູ້ບໍ່ມີຄວາມຜິດ, ເຮົາໄດ້ກະບົດຕໍ່ນາຍຂອງເຮົາ ແລະ ໄດ້ຂ້າເພິ່ນເສຍ,
ແຕ່ແມ່ນໃຜທີ່ຂ້າຄົນເຫລົ່ານີ້?
[10]ບັດນີ້ທ່ານຈົ່ງຮູ້ແນ່ເຖີດວ່າ ຖ້ອຍຄຳຂອງ ພຣະຢາເວບໍ່ວ່າສ່ວນໃດກໍຕາມ, ຊຶ່ງພຣະອົງໄດ້ກ່າວກ່ຽວກັບຣາຊວົງຂອງອາຮາບ,
ຈະບໍ່ຕົກດິນແຕ່ຢ່າງໃດເລີຍ, ເພາະພຣະຢາເວໄດ້ຊົງເຮັດສິ່ງທີ່ກ່າວຜ່ານທາງເອລີຢາຜູ້ຮັບໃຊ້ຂອງພຣະອົງ.
[11]ດັ່ງນັ້ນເຢຮູໄດ້ຂ້າທຸກຄົນທີ່ເຫລືອຢູ່ໃນຣາຊວົງຂອງອາຮາບໃນເມືອງຢິດຊະເຣນ, ແລະຜູ້ຊາຍທີ່ສຳຄັນທັງຫມົດຂອງລາວ,
ຫມູ່ເພື່ອນໃກ້ຊິດຂອງລາວ, ແລະປະໂລຫິດຂອງລາວ, ຈົນພວກເຂົາບໍ່ມີໃຜລອດຊີວິດຈັກຄົນ.
[12]ແລ້ວເຢຮູໄດ້ ລຸກຂຶ້ນແລະອອກໄປ; ລາວໄປເມືອງຊາມາເຣຍ. ໃນລະຫວ່າງທາງທີ່ລາວໄປຮອດທີ່ເບັດອີເກັດ ເຂດຫມູ່ບ້ານຂອງຜູ້ລ້ຽງແກະ,
[13]ລາວໄດ້ພົບອ້າຍນ້ອງຂອງກະສັດອາຮາຊີຢາແຫ່ງຢູດາ. ເຢຮູໄດ້ຖາມວ່າ, "ພວກທ່ານແມ່ນໃຜ?" ພວກເຂົາຕອບວ່າ,
"ພວກເຮົາເປັນອ້າຍນ້ອງຂອງອາຮາຊີຢາ,
ແລະພວກເຮົາກຳລັງຈະໄປຢ້ຽມບັນດາລູກຊາຍຂອງກະສັດແລະຂອງຣາຊີນີເຢຊາເບນ."[14]ເຢຮູໄດ້ເວົ້າກັບພວກຄົນຂອງລາວວ່າ,
"ຈັບເປັນພວກເຂົາ." ດັ່ງນັ້ນພວກເຂົາຈຶ່ງຈັບເປັນຄົນເຫລົ່ານັ້ນ ແລະ ຂ້າພວກເຂົາທັງສີ່ສິບສອງຄົນທີ່ນ້ຳສ້າງຂອງເບັດອີເກັດ.
ລາວບໍ່ໄດ້ປ່ອຍໃຫ້ພວກເຂົາຢູ່ລອດຈັກຄົນດຽວ.
[15]ເມື່ອເຢຮູນໄດ້ອອກໄປຈາກບ່ອນນັ້ນ, ລາວໄດ້ພົບ ໂຢນາດາບລູກຊາຍຂອງ ເຣກາບຜູ້ທີ່ກຳລັງມາຫາລາວ.
ເຢຮຸນໄດ້ຕ້ອນຮັບລາວແລະກ່າວກັບລາວວ່າ, "ຈິດໃຈຂອງເຈົ້າຊື່ສັດຕໍ່ເຮົາ, ຢ່າງທີ່ຈິດໃຈຂອງເຮົາຊື່ສັດກັບເຈົ້າບໍ?" ໂຢນາດາບຕອບວ່າ,
"ແມ່ນແລ້ວ." ເຢຮຸນກ່າວວ່າ, "ຖ້າສັດຊື່ກໍຍື່ນມືຂອງເຈົ້າມາໃຫ້ເຮົາ." ດັ່ງນັ້ນໂຢນາດາບຈຶ່ງຍື່ນມືຂອງລາວໃຫ້ເຢຮູ, ແລະ
ເຢຮູໄດ້ເອົາໂຢນາດາບຂຶ້ນໄປໃນຣົດຮົບກັບລາວ.[16]ເຢຮູໄດ້ກ່າວວ່າ, "ມາກັບເຮົາເຖີດແລະ ເບິ່ງຄວາມກະຕືລືລົ້ນຂອງເຮົາເພື່ອພຣະຢາເວ."
ດັ່ງນັ້ນລາວຈຶ່ງໃຫ້ໂຢນາດາບໄດ້ຂີ່ຣົດຮົບຂອງລາວໄປກັບລາວ.[17]ເມື່ອລາວມາຮອດເມືອງຊາມາເຣຍ,
ເຢຮູໄດ້ຂ້າທຸກຄົນໃນເຊື້ອສາຍຂອງອາຮາບທີ່ເຫລືອຢູ່ໃນເມືອງຊາມາເຣຍ, ຈົນຫມົດ, ເຢຮູໄດ້ທຳລາຍເຊື້ອສາຍທູກຄົນໃນຣາຊະວົງ
ຂອງອາຮາບ, ຕາມຖ້ອຍຄຳຂອງພຣະຢາເວ, ຊຶ່ງພຣະອົງໄດ້ບອກກັບເອລີຢາ.
[18]ແລ້ວເຢຮູໄດ້ເຕົ້າໂຮມປະຊາຊົນທຸກຄົນມາເຕົ້າໂຮມກັນ ແລະ ກ່າວກັບພວກເຂົາວ່າ, "ອາຮາບຮັບໃຊ້ພະບາອານເລັກນ້ອຍ,
ແຕ່ວ່າເຢຮູຈະຮັບໃຊ້ລາວຫລາຍກ່າວ.[19]ບັດນີ້ຈົ່ງເອີ້ນຜູ້ທຳນວາຍຂອງພະບາອານມາຫາເຮົາໃຫ້ຫມົດ, ທັງຜູ້ນະມັສະການ, ແລະ ນັກບວດ.
ທັງຫມົດຂອງພະບາອານ, ຢ່າໃຫ້ໃຜຂາດໄປເລີຍ, ເພາະເຮົາຈະມີການຖວາຍສັດບູຊາຄັ້ງໃຫຍ່ແກ່ພະບາອານ. ໃຜຂາດກໍຈະບໍ່ໃຫ້ມີຊີວິດຢູ່.
"ແຕ່ ເຢຮູໄດ້ເຮັດສິ່ງທີ່ຫລອກລວງໂດຍເຈຕະນາທີ່ຈະຂ້າຜູ້ທີ່ນະມັສະການພະບາອານ.[20]ເຢຮູໄດ້ ກ່າວວ່າ, "ຈົ່ງຈັດຊຸມນຸມ
ເພື່ອນະມັສະການພະບາອານ." ດັ່ງນັ້ນພວກເຂົາຈຶ່ງປະກາດເອີ້ນປະຊຸມດັ່ງກ່າວ.
[21]ແລ້ວເຢຮູໄດ້ສົ່ງຂ່າວໄປອິສະຣາເອນແລະຜູ້ທີ່ນະມັສະການພະບາອານທຸກຄົນກໍ ມາທັງຫມົດ, ດັ່ງນັ້ນຈຶ່ງບໍ່ມີເຫລືອຈັກຄົນ ຫນຶ່ງ ທີ່ບໍ່ໄດ້ມາ.
ພວກເຂົາໄດ້ເຂົ້າໄປໃນວິຫານຂອງພະບາອານ, ແລະມັນກໍເຕັມໄປຈາກເບື້ອງ ຫນຶ່ງ ຫາອີກເບື້ອງຫນຶ່ງ.[22]ເຢຮູໄດ້ສັ່ງຜູ້ຮັບຜິດຊອບຕູ້ເສື້ອຄຸມວ່າ,
"ຈົ່ງເອົາເສື້ອຄຸມສຳລັບຜູ້ທີ່ນະມັສະການພະບາອານອອກມາ." ດັ່ງນັ້ນຊາຍຄົນນັ້ນຈຶ່ງເອົາເສື້ອຄຸມອອກ.
[23]ດັ່ງນັ້ນ ເຢຮູ ໄດ້ໄປກັບ ໂຢນາດາບ ລູກຊາຍຂອງ ເຣກາບ ເຂົ້າໄປໃນເຮືອນຂອງພະບາອານ,
ແລະລາວໄດ້ກ່າວກັບຜູ້ນະມັສະການຂອງພະບາອານວ່າ, "ຈົ່ງຊອກຫາ ແລະໃຫ້ແນ່ໃຈວ່າບໍ່ມີຜູ້ນະມັສະການພຣະຢາເວຢູ່ກັບພວກທ່ານ,
ແຕ່ໃຫ້ມີຜູ້ທີ່ນະມັສະການພະບາອານເທົ່ານັ້ນ."[24]ຈາກນັ້ນພວກເຂົາໄດ້ເຂົ້າໄປຖວາຍເຄື່ອງບູຊາ ແລະເຄື່ອງເຜົາບູຊາ. ດຽວນີ້
ເຢຮູໄດ້ເລືອກເອົາຜູ້ຊາຍແປດສິບຄົນທີ່ກຳລັງຢືນຢູ່ທາງນອກ, ແລະ ລາວໄດ້ບອກພວກເຂົາວ່າ,“ ຖ້າຜູ້ໃດທີ່ຂ້າພະເຈົ້າເອົາເຂົ້າໄປໃນມືຂອງທ່ານ
ຫນີ, ຜູ້ໃດກໍຕາມທີ່ປ່ອຍໃຫ້ຊາຍຄົນນັ້ນລອດໄປໄດ້, ລາວຈະຖືກປຣະຫານຊີວິດຂອງລາວແທນ."
[25]ດັ່ງນັ້ນທັນທີທີ່ເຢຮູໄດ້ຖວາຍເຄື່ອງເຜົາບູຊາ ສຳເລັດແລ້ວ, ທ່ານໄດ້ກ່າວກັບທະຫານຍາມ ແລະ ຜູ້ບັນຊາການວ່າ, "ຈົ່ງເຂົ້າໄປ ແລະ
ຂ້າພວກເຂົາ. ຢ່າໃຫ້ຜູ້ໃດອອກມາ." ດັ່ງນັ້ນເມື່ອຂ້າພວກເຂົາດ້ວຍຄົມດາບແລ້ວ, ທະຫານຍາມແລະ

ພວກຜູ້ບັນຊາການໄດ້ໂຍນສົບພວກເຂົາອອກໄປຂ້າງນອກ ແລະ ກໍເຂົ້າໄປໃນຫ້ອງຊັ້ນໃນຂອງວິຫານພະບາອານ.
[26]ພວກເຂົາໄດ້ດຶງເສົາຫີນທີ່ຕັ້ງຢູ່ໃນວິຫານຂອງພະບາອານໄປເຜົາເສຍ.[27]ແລ້ວພວກເຂົາໄດ້ທຳລາຍເສົາສັກສິດຂອງພະບາອານ, ແລະ
ໄດ້ທຳລາຍວິຫານຂອງພະບາອານ ແລະ ເຮັດເປັນວິດຖ່າຍ, ຈົນຮອດປະຈຸບັນນີ້.
[28]ນີ້ຄືວິທີທີ່ເຢຮູໄດ້ທຳລາຍຜູ້ນະມັສະການພະບາອານອອກຈາກອິສະຣາເອນ.
[29]ແຕ່ເຢຮູບໍ່ໄດ້ປະຖິ້ມບາບຂອງ ເຢໂຣໂບອາມລູກຊາຍຂອງເນບັດ, ຜູ້ຊຶ່ງລາວໄດ້ເຮັດໃຫ້ອິສະຣາເອນເຮັດບາບ -
ນັ້ນແມ່ນການນະມັສະການລູກງົວຄຳ ຢູ່ ໃນເມືອງເບັດເອນ ແລະ ໃນເມືອງດານ.[30]ດັ່ງນັ້ນພຣະຢາເວໄດ້ກ່າວກັບເຢຮູວ່າ,
"ເພາະວ່າເຈົ້າໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍຕາຂອງເຮົາ, ແລະ ໄດ້ເຮັດກັບຄອບຄົວຂອງອາຮາບຕາມທຸກສິ່ງທີ່ຢູ່ໃນໃຈຂອງເຮົາ,
ລູກຫລານຂອງເຈົ້າສີ່ຮຸ່ນອາຍຸຄົນຈະໄດ້ນັ່ງຢູ່ເທິງບັນລັງຂອງອິສະຣາເອນ."[31]ແຕ່ເຢຮູບໍ່ສົນໃຈທີ່ຈະດຳເນີນຕາມກົດບັນຍັດຂອງພຣະຢາເວ,
ພຣະເຈົ້າຂອງອິສະຣາເອນ, ດ້ວຍສຸດໃຈຂອງເຂົາ. ລາວບໍ່ໄດ້ຫັນຫນີຈາກບາບຂອງ ເຢໂຣໂບອາມ,
ໂດຍລາວໄດ້ນຳໃຫ້ອິສະຣາເອນເຮັດບາບດ້ວຍ.
[32]ໃນຄາວນັ້ນພຣະຢາເວຊຶ່ງເລີ່ມຕັດດິນແດນຂອງອິສະຣາເອນອອກ, ແລະ ຮາຊາເອວກໍໄດ້ຮົບຊະນະທົ່ວດິນແດນອິສະຣາເອນ,
[33]ຕັ້ງແຕ່ແມ່ນ້ຳຈໍແດນຟາກຕາເວັນອອກທັງຫມົດ ແຜ່ນດິນກີເລອາດ, ຄົນກາດ, ແລະ ຄົນລູເບັນແລະ ຄົນມານາເຊ ຕັ້ງແຕ່ເມືອງ ອາໂຣເອ,
ເຊິ່ງຢູ່ຂ້າງຮ່ອມພູ ຂອງອາກໂນນ, ຜ່ານກີເລອາດໄປຈົນເຖິງບາຊານ.
[34]ສຳລັບເລື່ອງອື່ນກ່ຽວກັບເຢຮູ, ແລະ ທຸກສິ່ງທີ່ລາວໄດ້ເຮັດ ແລະ
ອຳນາດຂອງລາວແມ່ນບໍ່ໄດ້ຖືກຂຽນໄວ້ໃນປຶ້ມບັນທຶກເຫດການຕ່າງໆຂອງກະສັດຂອງອິສະຣາເອນບໍ?
[35]ເຢຮູຈຶ່ງໄດ້ລ່ວງລັບໄປຢູ່ກັບບັນພະບຸຣຸດຂອງເພິ່ນ, ແລະ ພວກເຂົາໄດ້ຝັງເພິ່ນໄວ້ທີ່ເມືອງຊາມາເຣຍ. ຫລັງຈາກນັ້ນ
ເຢໂຮອາຮາດລູກຊາຍຂອງເພິ່ນໄດ້ຂຶ້ນເປັນກະສັດແທນ.
[36]ເວລາທີ່ເຢຮູໄດ້ປົກຄອງປະເທດອິສະຣາເອນຢູ່ທີ່ເມືອງຊາມາເຣຍນັ້ນຄືອາຍຸໄດ້ຊາວແປດປີ.


generated on Tue Jun 17 19:01:42 2025

11 1ບັດນີ້ເມື່ອ ອາທາລີຢາ, ແມ່ຂອງອາຮາຊີຢາ, ໄດ້ເຫັນວ່າລູກຊາຍຂອງນາງໄດ້ຕາຍໄປແລ້ວ, ນາງກໍໄດ້ລຸກຂຶ້ນແລະຂ້າເຊື້ອພະວົງທັງຫມົດ.
2ແຕ່ເຢໂຮເຊບາລູກສາວຂອງກະສັດເຢໂຮຣາມ, ແລະນ້ອງສາວຂອງອາຮາຊີຢາ, ໄດ້ລັກນໍາໂຢອາດລູກຊາຍຂອງອາຮາຊີຢາ,
ແລະໄດ້ເຊື່ອງເຂົາໄວ້ຈາກທ່າມກາງບັນດາລູກຊາຍຂອງກະສັດ ຊຶ່ງຕ້ອງຖືກຂ້າ, ລວມທັງພີ່ລ້ຽງຂອງເຂົາ; ນາງໄດ້ວາງເຂົາໄວ້ໃນຫ້ອງນອນ.
ພວກເຂົາໄດ້ເຊື່ອງເຂົາໄວ້ຈາກອາທາລີຢາ ເພື່ອວ່າເຂົາຈະບໍ່ໄດ້ຖືກຂ້າ. 3ເຂົາໄດ້ຢູ່ກັບເຢໂຮເຊບາ, ຜູ້ຊຶ່ງເຊື່ອງເຂົາໄວ້ໃນວິຫານຂອງພຣະຢາເວ,
ເປັນເວລາຫົກປີ, ໃນຂະນະທີ່ອາທາລີຢາໄດ້ຊົງປົກຄອງເຫນືອແຜ່ນດິນ.

4ແຕ່ໃນປີທີເຈັດ, ເຢໂຮຍອາດາໄດ້ສົ່ງສານແລະໄດ້ນໍາໄປມອບໃຫ້ບັນດາຜູ້ບັນຊາການ, ແລະຂອງພວກນາຍທະຫານຍາມ,
ໃຫ້ມາຫາເຂົາໃນພຣະວິຫານຂອງພຣະຢາເວ. ເພິ່ນໄດ້ເຮັດພັນທະສັນຍາກັບພວກເຂົາ, ແລະ
ໃຫ້ພວກເຂົາສາບານໃນພຣະວິຫານຂອງພຣະຢາເວ. ແລ້ວເຂົາກໍໄດ້ນໍາເອົາລູກຊາຍຂອງກະສັດມາໃຫ້ພວກເຂົາເຫັນ.
5ເພິ່ນໄດ້ສັ່ງພວກເຂົາວ່າ," ສິ່ງນີ້ເປັນສິ່ງທີ່ພວກເຈົ້າຕ້ອງເຮັດຄື. ກຸ່ມຫນຶ່ງໃນສາມກຸ່ມຂອງພວກເຈົ້າຜູ້ຊຶ່ງເຝົ້າຍາມໃນວັນສະບາໂຕ
ຈະຕ້ອງເຝົ້າຍາມວັງຂອງກະສັດ, 6ແລະ ອີກກຸ່ມຫນຶ່ງຈະຕ້ອງຢືນຍາມທີ່ປະຕູຊູເຣ, ແລະ ອີກກຸ່ມຫນຶ່ງໃຫ້ປະຈໍາຢູ່ທີ່ປະຕູຫລັງປ້ອມຍາມ,"
7ສ່ວນອີກສອງກຸ່ມທີ່ບໍ່ໄດ້ຢູ່ຍາມໃນວັນສະບາໂຕ, ພວກເຈົ້າຕ້ອງເຝົ້າຣະວັງພຣະວິຫານຂອງ ພຣະຢາເວ ສໍາລັບກະສັດ.
8ພວກເຈົ້າຕ້ອງອ້ອມກະສັດໄວ້, ຜູ້ຊາຍທຸກຄົນພ້ອມບັນດາອາວຸດໃນມື. ຂອງພວກເຂົາຜູ້ໃດກໍຕາມ, ທີ່ເຂົ້າໄປໃກ້ໃນແຖວຈະຕ້ອງຖືກຂ້າ.
ເຈົ້າຕ້ອງຢູ່ກັບກະສັດ ເມື່ອພະອົງອອກໄປ, ແລະເມື່ອພະອົງເຂົ້າມາ.
9ດັ່ງນັ້ນບັນດາຜູ້ບັນຊາການກອງຮ້ອຍ ກໍໄດ້ເຊື່ອຟັງທຸກສິ່ງຕາມທີ່ເຢໂຮຍອາດາປະໂລຫິດໄດ້ສັ່ງໄວ້. ແຕ່ລະຄົນຕ່າງກໍນໍາຄົນຂອງຕົນ,
ຜູ້ຊຶ່ງຈະເຂົ້າຍາມໃນວັນສະບາໂຕ, ແລະ ພ້ອມກັບຜູ້ທີ່ຈະອອກຍາມວັນສະບາໂຕນັ້ນ; ແລະ ພວກເຂົາໄດ້ມາຫາເຢໂຮຍອາດາປະໂລຫິດ.
10ແລ້ວເຢໂຮຍອາດາ ປະໂລຫິດກໍໄດ້ມອບຫອກ ແລະ ໂລ້ແກ່ບັນດາຜູ້ບັນຊາການ ຊຶ່ງເປັນຂອງກະສັດດາວິດ ແລະ
ທີ່ຢູ່ໃນພຣະວິຫານຂອງພຣະຢາເວ.
11ດັ່ງນັ້ນພວກທະຫານຍາມ, ແຕ່ລະຄົນໄດ້ຢືນພ້ອມບັນດາອາວຸດໃນມືຂອງພວກເຂົາ, ຈາກດ້ານຂວາໄປເຖິງດ້ານຊ້າຍຂອງພຣະວິຫານ,
ໃກ້ແທ່ນບູຊາ ແລະ ພຣະວິຫານ, ອ້ອມຮອບກະສັດ. 12ແລ້ວເຢໂຮຍອາດາກໍໄດ້ນໍາລູກຊາຍຂອງກະສັດໂຢອາດ, ອອກມາໄດ້ສວມມົງກຸດໃຫ້ເຂົາ,
ແລະ ໄດ້ມອບກົດເກນແຫ່ງພັນທະສັນຍາໃຫ້ເຂົາ. ແລ້ວພວກເຂົາໄດ້ຕັ້ງ ແລະ ເຈີມເຂົາໃຫ້ເປັນກະສັດ
ແລ້ວພວກເຂົາກໍໄດ້ຕົບມືລະບອກວ່າ,"ຂໍໃຫ້ກະສັດຈະເຣີນຫມັ້ນຍືນເຖີ້ນ!"
13ເມື່ອອາທາລີຢາໄດ້ຍິນສຽງທະຫານຍາມ ແລະ ສຽງປະຊາຊົນ, ນາງກໍໄດ້ເຂົ້າໄປຫາປະຊາຊົນໃນພຣະວິຫານຂອງພຣະຢາເວ. 14ນາງໄດ້ເບິ່ງ,
ແລະ, ເບິ່ງແມ, ກະສັດໄດ້ຊົງຢືນຢູ່ຂ້າງເສົາ, ຕາມທໍານຽມທີ່ເຄີຍປະຕິບັດ, ແລະ ມີບັນດາຜູ້ບັນຊາການ ແລະ ຄົນເປົ່າແກໄດ້ຢູ່ຂ້າງກະສັດ.
ປະຊາຊົນທັງຫມົດໃນແຜ່ນດິນກໍໄດ້ຊື່ນຊົມຍິນດີ ແລະ ໄດ້ເປົ່າແກ. ແລ້ວອາທາລີຢາກໍໄດ້ຈີກເສື້ອຜ້າຂອງນາງ ແລະ ໄດ້ຮ້ອງຂຶ້ນວ່າ," ກະບົດ!
ກະບົດ!"
15ແລ້ວເຢໂຮຍອາດາປະໂລຫິດໄດ້ສັ່ງພວກບັນຊາການທີ່ໄດ້ຮັບການຕັ້ງໃຫ້ຄວບຄຸມ, ກອງທັບວ່າ,
"ຈົ່ງນໍາຕົວນາງອອກມາລະຫວ່າງແຖວທະຫານ. ໃຜກໍຕາມທີ່ຕິດຕາມນາງໄປ, ຈົ່ງຂ້າເຂົາເສຍດ້ວຍດາບ." ເພາະປະໂລຫິດໄດ້ກ່າວວ່າ,
"ຢ່າຂ້ານາງໃນພຣະວິຫານຂອງພຣະຢາເວ." 16ດັ່ງນັ້ນພວກເຂົາຈຶ່ງໄດ້ຈັບນາງ ໃນຂະນະທີ່ນາງໄດ້ໄປເຖິງທາງທີ່ມ້າເຂົ້າເດີນພະຣາຊວັງ, ແລະ
ນາງໄດ້ຖືກຂ້າເສຍທີ່ນັ້ນ.
17ແລ້ວເຢໂຮຍອາດາໄດ້ເຮັດພັນທະສັນຍາລະຫວ່າງພຣະຢາເວແລະກັບກະສັດ ແລະກັບປະຊາຊົນ,
ວ່າພວກເຂົາຄວນຈະເປັນປະຊາຊົນຂອງພຣະຢາເວ, ແລະຍັງເຮັດພັນທະສັນຍາລະຫວ່າງກະສັດແລະປະຊາຊົນດ້ວຍ.
18ດັ່ງນັ້ນປະຊາຊົນຫມົດທັງແຜ່ນດິນກໍໄດ້ເຂົ້າໄປໃນສາລາຂອງພະບາອານແລະມ້າງສາລາລົງ.
ພວກເຂົາໄດ້ທໍາລາຍບັນດາແທ່ນບູຊາແລະຮູບເຄົາຣົບຂອງພະບາອານຫັກເປັນຕ່ອນໆ, ແລະພວກເຂົາໄດ້ຂ້າມັດຕານ,
ນັກບວດຂອງພະບາອານເສຍທີ່ຫນ້າແທ່ນບູຊາ. ແລ້ວເຢໂຮຍອາດາປະໂລຫິດໄດ້ແຕ່ງຕັ້ງພວກຍາມໄວ້ເຝົ້າພຣະວິຫານຂອງພຣະຢາເວ.
19ເຢໂຮຍອາດາໄດ້ພາພວກຜູ້ບັນຊາການ, ພວກທະຫານຍາມ, ແລະປະຊາຊົນທັງຫມົດແຫ່ງແຜ່ນດິນໄປກັບເພິ່ນ,
ແລະພວກເພິ່ນໄດ້ແຫ່ກະສັດອອກມາຈາກພຣະວິຫານຂອງພຣະຢາເວຮ່ວມກັນ ແລະພວກເຂົາໄດ້ເຂົ້າໄປໃນວັງຂອງກະສັດ,
ທີ່ທາງປະຕູທະຫານຍາມ. ໂຢອາດກໍໄດ້ຂຶ້ນນັ່ງເທິງບັນລັງຂອງກະສັດ. 20ດັ່ງນັ້ນປະຊາຊົນທັງຫມົດແຫ່ງແຜ່ນດິນກໍໄດ້ຊົມຊື່ນຍິນດີ,
ແລະບ້ານເມືອງກໍໄດ້ສະຫງົບຫລັງຈາກໄດ້ຂ້າອາທາລີຢາດ້ວຍດາບແລ້ວທີ່ວັງຂອງກະສັດ.
21ໂຢອາດມີອາຍຸໄດ້ເຈັດປີເມື່ອພະອົງຊົງຄອງຣາຊ.


generated on Tue Jun 17 19:01:42 2025

# 12

[1]ໃນປີທີເຈັດແຫ່ງຣາຊການເຢຮູ, ໂຢອາດໄດ້ປົກຄອງ; ເປັນເວລາສີ່ສິບປີໃນເຢຣູຊາເລັມ. ແມ່ຂອງພະອົງຊື່ວ່າ ຊີບີຢາ, ຊາວເບເຍເອເຊບາ.
[2]ໂຢອາດໄດ້ຊົງເຮັດສິ່ງທີ່ຊອບທັມໃນສາຍຕາຂອງພຣະຢາເວຕະຫລອດຣາຊການນັ້ນ, ເພາະເຢໂຮຍອາດາປະໂລຫິດໄດ້ແນະນຳພະອົງ.
[3]ແຕ່ສະຖານສູງຕ່າງໆຍັງບໍ່ໄດ້ມ້າງລົງ. ປະຊາຊົນຍັງຄົງຖວາຍສັດບູຊາ ແລະເຜົາເຄື່ອງຫອມໃນສະຖານສູງເຫລົ່ານັ້ນ.

[4]ໂຢອາດໄດ້ເວົ້າກັບພວກປະໂລຫິດວ່າ," ເງິນທັງຫມົດອັນເປັນຂອງຖວາຍທີ່ບໍຣິສຸດ ຊຶ່ງໄດ້ນຳເຂົ້າມາໃນພຣະວິຫານຂອງພຣະຢາເວ,
ໄດ້ແກ່ເງິນທີ່ໄດ້ຮຽກຈາກແຕ່ລະຄົນ ຄືເງິນທີ່ໄດ້ເກັບໂດຍການສຳຫລວດສຳມະໂນ, ປະຊາຊົນຫລືເງິນທີ່ໄດ້ຈາກການປະຕິຍານຂອງບຸກຄົນ,
ຫລືເງິນທີ່ປະຊາຊົນໄດ້ຖວາຍໂດຍການຄົນໃຈຈາກພຣະຢາເວ
ດ້ວຍສະມັກໃຈຂອງພວກເຂົາ[5]ປະໂລຫິດຄວນຮັບເງິນນັ້ນຈາກຫນຶ່ງຂອງພວກຜູ້ເກັບເງິນທັງຫລາຍ
ແລະສ້ອມແປງພຣະວິຫານບ່ອນທີ່ເຫັນວ່າເປ່ເພ."
[6]ແຕ່ໃນປີທີຊາວສາມຂອງຣາຊການຂອງກະສັດໂຢອາດ, ພວກປະໂລຫິດບໍ່ໄດ້ສ້ອມແປງສິ່ງໃດໃນພຣະວິຫານເລີຍ.
[7]ແລ້ວກະສັດໂຢອາດຈຶ່ງໄດ້ຊົງເອີ້ນເຢໂຮຍອາດາປະໂລຫິດແລະບັນດາປະໂລຫິດອື່ນໆ; ພະອົງໄດ້ກ່າວກັບພວກເຂົາວ່າ,"
ເປັນຫຍັງພວກທ່ານຈຶ່ງບໍ່ສ້ອມແປງສິ່ງໃດໆໃນພຣະວິຫານ? ສະນັ້ນຕໍ່ໄປນີ້ຢ່າຮັບເງິນຈາກຜູ້ບໍຣິຈາກເລີຍ,
ແຕ່ໃຫ້ເກັບເງິນມາສະເພາະທີ່ຈະແປງພຣະວິຫານ ແລະ
ຈ່າຍໃຫ້ແກ່ພວກຜູ້ທີ່ຈະສ້ອມແປງພຣະວິຫານເທົ່ານັ້ນ."[8]ດັ່ງນັ້ນພວກປະໂລຫິດຈຶ່ງໄດ້ຕົກລົງກັນວ່າຈະບໍ່ຮັບເງິນຈາກປະຊາຊົນອີກ ແລະ
ຈະບໍ່ສ້ອມແປງພຣະວິຫານດ້ວຍຕົວຂອງພວກເຂົາເອງ.
[9]ໄດ້ເຈາະຮູຫນຶ່ງທີ່ຝາຫີບນັ້ນ, ແລະໄດ້ໄວ້ທີ່ແທ່ນບູຊາດ້ານຂວາ, ທາງເຂົ້າພຣະວິຫານຂອງພຣະຢາເວ.
ແລະປະໂລຫິດທີ່ເຝົ້າຢູ່ທາງເຂົ້າພຣະວິຫານກໍໄດ້ໃສ່ເງິນທັງຫມົດລົງໄປໃນຫີບທີ່ໄດ້ເຂົ້າມາໃນພຣະວິຫານຂອງພຣະຢາເວ.
[10]ເມື່ອໃດກໍຕາມທີ່ພວກເພິ່ນເຫັນວ່າມີເງິນໃນຫີບຫລາຍພໍແລ້ວ, ເລຂາທິການແລະມະຫາປະໂລຫິດຈະມາແລະເອົາເງິນໃສ່ຖົງ,
ແລ້ວເອົາເງິນທີ່ໄດ້ໃນພຣະວິຫານຂອງພຣະຢາເວໄປນັບ.
[11]ພວກເຂົາໄດ້ມອບເງິນທີ່ຊັ່ງແລ້ວໃຫ້ແກ່ບັນດາຄົນທີ່ດູແລພຣະວິຫານຂອງພຣະຢາເວ.
ພວກເຂົາໄດ້ຈ່າຍໃຫ້ແກ່ພວກຊ່າງໄມ້ແລະພວກຊ່າງກໍ່ສ້າງ ຜູ້ຊຶ່ງໄດ້ບູຣະນະວິຫານຂອງພຣະຢາເວ,
[12]ແລະໃຫ້ແກ່ພວກຊ່າງກໍ່ແລະພວກຊ່າງສະກັດຫີນ, ເພື່ອຊື້ໄມ້ແລະຫີນສະກັດທີ່ໃຊ້ໃນການສ້ອມແປງພຣະວິຫານຂອງພຣະຢາເວ,
ແລະສຳລັບຄ່າໃຊ້ຈ່າຍອື່ນໆທັງຫມົດທີ່ຈຳເປັນໃນການສ້ອມແປງ.
[13]ແຕ່ເງິນທີ່ໄດ້ນຳເຂົ້າມາໃນພຣະວິຫານຂອງພຣະຢາເວນັ້ນ ບໍ່ໃຫ້ນຳໄປໃຊ້ໃນການເຮັດພວກຖ້ວຍເງິນ, ມີດຕັດໄສ້ຕະກຽງ, ອ່າງ, ແກ,
ຫລືພາຊະນະທອງຄຳ, ຫລືພາຊະນະເງິນທີ່ໃຊ້ຕົກແຕ່ງໃດໆ.[14]ພວກເຂົາໄດ້ຈ່າຍເງິນໃຫ້ແກ່ພວກທີ່ເຮັດງານສ້ອມພຣະວິຫານຂອງພຣະຢາເວ.
[15]ຍິ່ງກວ່ານັ້ນພວກເຂົາບໍ່ຕ້ອງຂຽນລາຍງານຄ່າໃຊ້ຈ່າຍ ໃນການແປງ ທັງພວກຜູ້ທີ່ໄດ້ຮັບເງິນ ແລະພວກຜູ້ທີ່ໄດ້ຈ່າຍເງິນແກ່ພວກຄົນງານ,
ເພາະພວກເຂົາໄດ້ປະຕິບັດງານດ້ວຍຄວາມສັດຊື່.[16]ແຕ່ເງິນຖວາຍບູຊາເພື່ອການລົບຄວາມຜິດແລະເງິນຖວາຍບູຊາລົບລ້າງບາບ
ຈະບໍ່ໄດ້ນຳມາໄວ້ໃນພຣະວິຫານຂອງພຣະຢາເວ, ເພາະເງິນນັ້ນໃຫ້ເປັນຂອງພວກປະໂລຫິດ.
[17]ແລ້ວຮາຊາເອນກະສັດແຫ່ງອາຣາມໄດ້ຊົງຂຶ້ນໄປຮົບກັບເມືອງກາດ, ແລະຍຶດເມືອງນັ້ນໄດ້.
ແລ້ວຮາຊາເອນກໍໄດ້ຫັນຂຶ້ນໄປໂຈມຕີກຸງເຢຣູຊາເລັມ.
[18]ໂຢອາດກະສັດແຫ່ງຢູດາໄດ້ນຳເອົາສິ່ງຂອງສັກສິດທັງຫມົດທີ່ເຢໂຮຊາຟັດແລະເຢໂຮຣາມແລະອາຮາຊີຢາ, ບັນພະບຸຣຸດຂອງພະອົງ,
ຜູ້ເປັນກະສັດແຫ່ງຢູດາ, ໄດ້ຊົງຊຳຮະໃຫ້ບໍຣິສຸດໄວ້ນັ້ນ, ແລະສິ່ງຂອງສັກສິດຂອງພະອົງເອງ,
ແລະທອງຄຳທັງຫມົດທີ່ໄດ້ເຫັນໃນຄັງຂອງພຣະວິຫານພຣະຢາເວ
ແລະວັງຂອງກະສັດມາແລະພະອົງໄດ້ສົ່ງສິ່ງເຫລົ່ານີ້ໄປໃຫ້ຮາຊາເອນກະສັດແຫ່ງອາຣາມ.
ແລ້ວຮາຊາເອນກໍໄດ້ຊົງຖວາຍຊັບໄປຈາກກຸງເຢຣູຊາເລັມ.
[19]ສ່ວນພະຣາຊກິດອື່ນໆຂອງໂຢອາດ, ແລະທຸກສິ່ງທີ່ໄດ້ຊົງກະທຳ, ໄດ້ບັນທຶກໃນຫນັງສືພົງສາວະດານກະສັດແຫ່ງຢູດາບໍ່ແມ່ນບໍ?
[20]ພວກຜູ້ຮັບໃຊ້ຂອງພະອົງໄດ້ລຸກຂຶ້ນແລະໄດ້ກໍ່ການກະບົດ; ພວກເຂົາໄດ້ຂ້າໂຢອາດເສຍໃນເບັນມິນໂລຕາມທາງທີ່ລົງໄປຍັງສິນລາ.
[21]ໂຢຊາການລູກຊາຍຂອງຊີເມອາດ, ແລະເຢໂຮຊາບັດລູກຊາຍຂອງໂຊເມ, ພວກຂ້າຣາຊການຂອງພະອົງໄດ້ຂ້າພະອົງເສຍ.
ພວກເຂົາໄດ້ຝັງໂຢອາດໄວ້ກັບບັນພະບຸຣຸດໃນເມືອງດາວິດ, ແລະອາມາຊີຢາ, ລູກຊາຍຂອງພະອົງໄດ້ຂຶ້ນເປັນກະສັດແທນ.

 generated on Tue Jun 17 19:01:42 2025

# 13

[1]ໃນປີທີຊາວສາມແຫ່ງຣາຊການໂຢອາດ ລູກຊາຍຂອງອາຮາຊີຢາ ກະສັດແຫ່ງຢູດາ, ເຢໂຮອາຮາດ
ລູກຊາຍຂອງເຢຮູໄດ້ຊົງປົກຄອງເຫນືອອິສະຣາເອນໃນກຸງສະມາເຣຍ; ພະອົງປົກຄອງເປັນເວລາສິບເຈັດປີ.
[2]ພະອົງໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວແລະໄດ້ເຮັດບາບທັງຫລາຍຕາມເຢໂຣໂບອາມ ລູກຊາຍຂອງເນບັດ,
ຜູ້ໄດ້ນໍາອິສະຣາເອນໃຫ້ເຮັດບາບດ້ວຍ; ແລະເຢໂຮອາຮາດບໍ່ໄດ້ຊົງຫັນຫນີຈາກບາບນັ້ນ.

[3]ຄວາມໂກດຮ້າຍຂອງ ພຣະຢາເວ ກໍມີຫລາຍຂຶ້ນຕໍ່ອິສະຣາເອນ, ແລະພຣະອົງໄດ້ຊົງມອບເຂົາທັງຫລາຍໄວ້ໃນມືຮາຊາເອນ
ກະສັດແຫ່ງອາຣາມແລະໃນມືຂອງເບັນຮາດາດ ລູກຊາຍຂອງຮາຊາເອນ ຢ່າງຕໍ່ເນື່ອງ.
[4]ດັ່ງນັ້ນເຢໂຮອາຮາດໄດ້ຊົງພາວັນນາອະທິຖານຕໍ່ພຣະຢາເວ, ແລະ ພຣະຢາເວໄດ້ຊົງຟັງເພິ່ນ ເພາະພຣະອົງໄດ້ຊົງເຫັນການກົດຂີ່ອິສະຣາເອນ,
ຄືທີ່ກະສັດແຫ່ງອາຣາມໄດ້ຊົງກົດຂີ່ພວກເຂົາ.[5]ດັ່ງນັ້ນພຣະຢາເວໄດ້ຊົງປຣະທານຜູ້ນໍາຄົນຫນຶ່ງແກ່ອິສະຣາເອນ,
ແລ້ວພວກເຂົາຈຶ່ງໄດ້ລອດພົ້ນຈາກມືຂອງຄົນອາຣາມ, ແລະ ປະຊາຊົນອິສະຣາເອນກໍໄດ້ອາສັຍຢູ່ໃນບ້ານຂອງພວກເຂົາຢ່າງທີ່ເຄີຍມີມາກ່ອນນີ້.
[6]ເຖິງປານນັ້ນ, ພວກເຂົາກໍຫນີບໍ່ພົ້ນຈາກບາບ ຂອງຣາຊວົງຂອງເຢໂຣໂບອາມ, ຊຶ່ງພະອົງໄດ້ຊົງເປັນຕົ້ນເຫດ
ໃຫ້ອິດສະຣາເອນໄດ້ກະທໍາບາບດ້ວຍ, ແລະພວກເຂົາຍັງຄົງຢູ່ໃນບາບເຫລົ່ານັ້ນຕໍ່ໄປ; ແລະຮູບເຈົ້າແມ່ອາເຊລາກໍຍັງຢູ່ໃນສະມາເຣຍຕໍ່ໄປ.
[7]ພວກຄົນອາຣາມ ເຢໂຮອາຮາດ ໄດ້ເຫລືອພຽງທະຫານມ້າຫ້າສິບຄົນ, ຣົດຮົບສິບຄັນ, ແລະທະຫານລາບຫນຶ່ງຫມື່ນຄົນ,
ເພາະກະສັດແຫ່ງອາຣາມໄດ້ຊົງທໍາລາຍພວກເຂົາ ແລະ ໃຫ້ເປັນຢ່າງແກບໃນເວລາຟາດເຂົ້າ.
[8]ສ່ວນພະຣາຊກິດອື່ນໆຂອງເຢໂຮອາຮາດ, ແລະທຸກສິ່ງທີ່ໄດ້ຊົງກະທໍາ ແລະອໍານາດຂອງພະອົງ,
ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານກະສັດແຫ່ງອິສະຣາເອນບໍ່ແມ່ນບໍ?[9]ດັ່ງນັ້ນເຢໂຮອາຮາດໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ,
ແລະພວກເຂົາໄດ້ຝັງພະອົງໄວ້ໃນກຸງສະມາເຣຍ. ເຢໂຮອາດລູກຊາຍຂອງພະອົງໄດ້ຂຶ້ນເປັນກະສັດປົກຄອງແທນ.
[10]ໃນປີທີສາມສິບເຈັດ ແຫ່ງຣາຊການໂຢອາດກະສັດຂອງຢູດາ, ເຢໂຮອາດລູກຊາຍຂອງເຢໂຮອາຮາດໄດ້ຊົງປົກຄອງເຫນືອອິສະຣາເອນ ໃນ
ສະມາເຣຍ; ເປັນເວລາສິບຫົກປີ.[11]ພະອົງໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ.
ພະອົງບໍ່ໄດ້ຊົງຫັນຫນີຈາກບາບທັງຫມົດຂອງເຢໂຣໂບອາມລູກຊາຍຂອງເນບັດ, ຜູ້ຊົງນໍາອິສະຣາເອນໃຫ້ເຮັດບາບດ້ວຍ,
ແຕ່ພະອົງໄດ້ຊົງດໍາເນີນໃນບາບນັ້ນ.
[12]ສ່ວນຣາຊິດອື່ນໆຂອງເຢໂຮອາດ, ແລະທຸກສິ່ງທີ່ໄດ້ຊົງກະທໍາ, ແລະອໍານາດຊຶ່ງພະອົງໄດ້ຊົງສູ້ຮົບກັບອາມາຊີຢາກະສັດແຫ່ງຢູດາ,
ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານກະສັດຂອງອິສະຣາເອນບໍ່ແມ່ນບໍ?[13]ເຢໂຮອາດໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ,
ແລະເຢໂຣໂບອາມໄດ້ຂຶ້ນນັ່ງເທິງບັນລັງຂອງພະອົງ. ເຢໂຮອາດໄດ້ຖືກຝັງໄວ້ໃນສະມາເຣຍກັບບັນດາກະສັດແຫ່ງອິສະຣາເອນ.
[14]ບັດນີ້ ເອລີຊາໄດ້ລົ້ມປ່ວຍດ້ວຍພະຍາດທີ່ເຂົາຈະຕ້ອງຕາຍໃນໄວໆ, ດັ່ງນັ້ນເຢໂຮອາດກະສັດຂອງອິສະຣາເອນ ໄດ້ລົງໄປຫາເພິ່ນ
ແລະໄດ້ຊົງຮ້ອງໄຫ້ຕໍ່ຫນ້າເພິ່ນ. ພະອົງໄດ້ເວົ້າວ່າ, "ພໍເອີຍ, ພໍເອີຍ, ຣົດມ້າຮົບແຫ່ງອິສະຣາເອນ
ແລະທະຫານມ້າປະຈໍາຣົດກໍາລັງຈະມາຮັບທ່ານແລ້ວ!"[15]ເອລີຊາໄດ້ຕອບພະອົງວ່າ, "ຂໍໄດ້ເອົາຄັນທະນູ ແລະ ລູກທະນູມາຈໍານວນຫນຶ່ງດ້ວຍ,
"ດັ່ງນັ້ນໂຢອາດຈຶ່ງໄດ້ເອົາຄັນທະນູ ແລະລູກທະນູມາຈໍານວນຫນຶ່ງ.[16]ເອລີຊາໄດ້ບອກກະສັດແຫ່ງອິສະຣາເອນວ່າ,
"ຂໍໄດ້ຊົງຈັບຄັນທະນູໄວ້ໃນມືຂອງພະອົງ," ດັ່ງນັ້ນພະອົງໄດ້ຈັບຄັນທະນູໄວ້ໃນມືຂອງພະອົງ.
ແລ້ວເອລີຊາໄດ້ວາງມືເພິ່ນເທິງມືທັງສອງຂ້າງຂອງກະສັດ.
[17]ເອລີຊາໄດ້ບອກວ່າ,"ຂໍໄດ້ຊົງເປີດປ່ອງຢ້ຽມທາງທິດຕາເວັນອອກ,"ດັ່ງນັ້ນພະອົງໄດ້ຊົງເປີດແລ້ວ. ເອລີຊາໄດ້ບອກວ່າ," ຈົ່ງຍິງ!",
ແລະພະອົງກໍໄດ້ຍິງອອກໄປ. ເອລີຊາໄດ້ບອກວ່າ," ນີ້ຈະເປັນລູກທະນູແຫ່ງຊັຍຊະນະ ຂອງພຣະຢາເວ,
ລູກທະນູແຫ່ງຊັຍຊະນະເຫນືອພວກອາຣາມ, ເພາະພະອົງຈະໄດ້ທໍາລາຍຄົນອາຣາມໄດ້ຢ່າງລາບຄາບທີ່ອາເຟັກ.[18]ແລ້ວເອລີຊາໄດ້ບອກວ່າ,"
ຂໍໄດ້ຊົງຈັບລູກທະນູເຫລົ່ານັ້ນມາ," ດັ່ງນັ້ນໂຢອາດກໍໄດ້ຈັບລູກທະນູເຫລົ່ານັ້ນ.
ເພິ່ນໄດ້ບອກກະສັດແຫ່ງອິສະຣາເອນວ່າ,"ຊົງຕີລູກທະນູລົງພື້ນດິນເບິ່ງ,"ແລະພະອົງໄດ້ຕີສາມເທື່ອ, ແລ້ວກໍໄດ້ຢຸດ.
[19]ແຕ່ຄົນຂອງພຣະເຈົ້າກໍໄດ້ຮ້າຍພະອົງ ແລະໄດ້ບອກວ່າ," ພະອົງຄວນຈະຕີຫ້າຫລືຫົກເທື່ອ.
ແລ້ວພະອົງຈະໄດ້ຕີອາຣາມຈົນກວ່າຈະໄດ້ຊົງເຮັດໃຫ້ພວກເຂົາຫມົດໄປ, ແຕ່ບັດນີ້ພະອົງຈະຕີຊະນະອາຣາມໄດ້ພຽງສາມຄັ້ງເທົ່ານັ້ນ."
[20]ແລ້ວເອລີຊາໄດ້ຕາຍໄປ, ແລ້ວພວກເຂົາກໍໄດ້ຝັງເພິ່ນໄວ້. ປົກກະຕິໃນເວລານີ້ຊາວໂມອາບ ໄດ້ເຄີຍປຸ້ນໃນດິນແດນນັ້ນໃນຕອນຕົ້ນປີ.
[21]ຂະນະທີ່ພວກເຂົາກໍາລັງຝັງສົບຊາຍຄົນຫນຶ່ງຢູ່, ພວກເຂົາກໍເຫັນກຸ່ມຊາວໂມອາບ,
ດັ່ງນັ້ນພວກເຂົາຈຶ່ງໄດ້ໂຍນສົບຊາຍຄົນນັ້ນລົງໄປໃນຫລຸມຝັງຂອງເອລີຢາ. ເມື່ອສົບຂອງຊາຍຄົນນັ້ນໄດ້ໂດນກະດູກຂອງເອລີຊາ,
ຜູ້ຊາຍຄົນນັ້ນກໍໄດ້ມີຊີວິດຂຶ້ນມາແລະຢືນຂຶ້ນດ້ວຍຕົວເອງ.
[22]ຮາຊາເອນກະສັດແຫ່ງອາຣາມ ໄດ້ຊົງກົດຂີ່ຊາວອິສະຣາເອນຢູ່ຕະຫລອດ
ຣາຊການຂອງເຢໂຮອາຮາດ[23]ແຕ່ພຣະຢາເວໄດ້ຊົງພຣະເມດຕາຕໍ່ອິສະຣາເອນ,
ແລະພຣະອົງໄດ້ຊົງຫ່ວງໃຍພວກເຂົາແລະໄດ້ຊ່ວຍເຫລືອພວກເຂົາໄວ້, ເພາະພັນທະສັນຍາຂອງພຣະອົງທີ່ໄດ້ເຮັດໄວ້ກັບອັບຣາຮາມ, ອີຊາກ,
ແລະຢາໂຄບ. ດັ່ງນັ້ນພຣະຢາເວຈຶ່ງບໍ່ໄດ້ຊົງທໍາລາຍພວກເຂົາ, ແລະພຣະອົງຍັງຄົງບໍ່ໄດ້ໄລ່ພວກເຂົາໄປ ໃຫ້ພົ້ນພຣະພັກພຣະອົງເລີຍ.
[24]ຮາຊາເອນກະສັດແຫ່ງອາຣາມໄດ້ຕາຍໄປ, ແລະເບັນຮາດາດ ລູກຊາຍຂອງພະອົງໄດ້ຂຶ້ນເປັນກະສັດປົກຄອງແທນ.
[25]ເຢໂຮອາດລູກຊາຍຂອງເຢໂຮອາຮາດ ໄດ້ຍຶດບັນດາເມືອງຈາກເບັນຮາດາດລູກຊາຍຂອງຮາຊາເອນກັບຄືນມາ
ຊຶ່ງເປັນເມືອງທີ່ພະອົງໄດ້ຊົງຍຶດຈາກເຢໂຮອາຮາດ ພໍ່ຂອງເຢໂຮອາດໄດ້ເມື່ອຕອນເຮັດເສິກ. ເຢໂຮອາດໄດ້ຮົບຊະນະພະອົງສາມເທື່ອ,
ແລະໄດ້ບັນດາເມືອງອິສະຣາເອນກັບຄືນມາ.


generated on Tue Jun 17 19:01:42 2025

14 [1]ໃນປີທີສອງແຫ່ງຣາດຊະການໂຢອາດລູກຊາຍຂອງເຢໂຮອາຮາດ, ກະສັດຂອງອິສະຣາເອນ, ອາມາຊີຢາລູກຊາຍຂອງໂຢອາດ,
ກະສັດແຫ່ງຢູດາ, ໄດ້ຊົງຂຶ້ນຄອງບັນລັງ ເມື່ອທ່ານໄດ້ຊົງເປັນກະສັດນັ້ນ.[2]ພະອົງອາຍຸໄດ້ຊາວຫ້າປີພະອົງເລີ່ມປົກຄອງ; ພະອົງໄດ້ຄອງບັນ
ລັງຢູ່ໃນນະຄອນ ເຢຣູຊາເລັມຊາວເກົ້າປີ. ມານດາຂອງພະອົງມີຊື່ວ່າ ເຢໂຮອັດດິນ, ຊາວນະຄອນ ເຢຣູຊາເລັມ.[3]ພະອົງໄດ້ຊົງເຮັດສິ່ງທີ່ຊອບ
ທັມໃນສາຍຕາຂອງພຣະຢາເວ, ແຕ່ຍັງບໍ່ຄືກັນກັບດາວິດບັນພະບຸຣຸດຂອງພຣະອົງ. ພະອົງໄດ້ຊົງເຮັດທຸກຢ່າງທີ່ໂຢອາດ, ພໍ່ຂອງພະອົງ,
ໄດ້ຊົງເຮັດ.

[4]ແຕ່ສະຖານສູງເຫລົ່ານັ້ນກໍຍັງບໍ່ທັນໄດ້ຖືກທຳລາຍເທື່ອ. ປະຊາຊົນຍັງຄົງຖວາຍສັດເປັນເຄື່ອງບູຊາ ແລະ ເຜົາເຄື່ອງຫອມທີ່ສະຖານ
ສູງເຫລົ່ານັ້ນ.[5]ສິ່ງນີ້ໄດ້ເກີດຂຶ້ນເມື່ອຣາຊອານາຈັກໄດ້ຢູ່ໃນພະຫັດຂອງພະອົງຢ່າງຫມັ້ນຄົງແລ້ວ, ພະອົງກໍໄດ້ຊົງຂ້າພວກຜູ້ຮັບໃຊ້ທີ່ໄດ້ຂ້າບິດາ,
ຂອງກະສັດ.
[6]ແຕ່ພຣະອົງບໍ່ໄດ້ຊົງຂ້າລູກຂອງຜູ້ທີ່ໄດ້ປົງພຣະຊົນນັ້ນ; ແຕ່, ພະອົງໄດ້ຊົງປະຕິບັດຕາມທີ່ໄດ້ບັນທຶກໄວ້ໃນກົດບັນຍັດ, ໃນຫນັງສື, ຂອງໂມເຊ,
ຊຶ່ງພຣະຢາເວໄດ້ຊົງບັນຊາວ່າ, “ຢ່າຂ້າບິດາ ເພາະການກະທຳຂອງເຊື້ອສາຍພວກເຂົາ, ຫລືຢ່າຂ້າລູກຫລານເພາະການກະທຳຂອງບິ
ດາມານດາຂອງພວກເຂົາ. ແຕ່ລະຄົນຕ້ອງຖືກຂ້າຍ້ອນບາບຂອງຕົນເອງ.”[7]ພະອົງໄດ້ຊົງຂ້າຄົນເອໂດມຫລາຍສິບພັນຄົນໃນຮ່ອມພູເກືອ; ພະ
ອົງຍັງໄດ້ຊົງຢຶດເອົາເມືອງເສລາດ້ວຍສົງຄາມ, ແລະ ໄດ້ຊົງເອີ້ນເມືອງນັ້ນວ່າ ໂຢກເທເອນ, ຊຶ່ງເປັນຊື່ຈົນມາເຖິງທຸກມື້ນີ້.
[8]ແລ້ວອາມາຊີຢາໄດ້ສົ່ງຄະນະທູດໄປເຝົ້າໂຢອາດລູກຊາຍຂອງເຢໂຮອາຮາດກະສັດອິສະຣາເອນ, ກ່າວວ່າ, "ມາເຖີດ, ຂໍ
ໃຫ້ພວກທ່ານພົບກັນໃນສົງຄາມ."[9]ແຕ່ໂຢອາດກະສັດແຫ່ງອິສະຣາເອນໄດ້ສົ່ງຜູ້ສື່ສານໄປທີ່ອາມາຊີຢາກະສັດແຫ່ງຢູດາ, ກ່າວວ່າ, “
ຕົ້ນຫນາມໃນເລບານອນໄດ້ສົ່ງຂ່າວໄປຫາຕົ້ນສົນສີດາໃນເລບານອນ, ກ່າວວ່າ, 'ຈົ່ງໃຫ້ລູກສາວຂອງທ່ານເປັນເມຍຂອງລູກຊາຍຂອງຂ້າພະ
ເຈົ້າ,' ແຕ່ສັດປ່າໂຕຫນຶ່ງທີ່ຢູ່ໃນເລບານອນໄດ້ຜ່ານມາ ແລະໄດ້ກັກຢຽບຕົ້ນຫນາມນັ້ນລົງ.[10]ທ່ານໄດ້ໂຈມຕີເອໂດມ, ແລະ ຈ
ິດໃຈຂອງທ່ານກໍເຮັດໃຫ້ທ່ານຈອງຫອງຂຶ້ນ. ຈົ່ງພູມໃຈໃນຊັຍຊະນະຂອງທ່ານເຖີດ, ແຕ່ຈົ່ງຢູ່ກັບເຮືອນຂອງຕົນ,
ເພາະວ່າເປັນຫຍັງທ່ານຈຶ່ງສ້າງບັນຫາໃຫ້ກັບຕົວເອງ ແລະ ລົ້ມລົງ, ທັງທ່ານ ແລະ ຢູດາດ້ວຍ?"
[11]ແຕ່ອາມາຊີຢາບໍ່ຍອມຟັງ. ດັ່ງນັ້ນເຢໂຮອາດ ກະສັດແຫ່ງອິສະຣາເອນ ຈຶ່ງໄດ້ຊົງໂຈມຕີ ແລະ ພະອົງກັບອາມາຊີຢາ ກະສັດແຫ່ງຢູດາກໍ
ຊົງໄດ້ຜະເຊີນຫນ້າກັນຢູ່ທີ່ເມືອງເບັດເຊເມັດ, ເຊິ່ງເປັນຂອງຢູດາ.[12]ຢູດາກໍໄດ້ພ່າຍແພ້ຊາວອິສະຣາເອນ, ແລະ ຜູ້ຊາຍທຸກຄົນກໍໄດ້ຫນີກັບບ້ານ.
[13]ເຢໂຮອາດກະສັດແຫ່ງອິສະຣາເອນ, ກໍໄດ້ຊົງຈັບອາມາຊີຢາ, ກະສັດແຫ່ງຢູດາ ລູກຊາຍຂອງກະສັດໂຢອາດ, ບຸດຊາຍຂອງອາຮາຊີຢາ, ໄດ້
ທີ່ເມືອງເບັດເຊເມດ. ແລະໄດ້ຊົງທຳລາຍກຳແພງນະຄອນ ເຢຣູຊາເລັມເປັນໄລຍະທາງສີ່ຮ້ອຍຊັ່ງຕີແມັດ. ຕັ້ງແຕ່ປະຕູເອຟຣາ
ຢິມຈົນເຖິງປະຕູແຈ,[14]ແລະພະອົງໄດ້ຊົງຢຶດເອົາທອງຄຳ ແລະ ເງິນທັງຫມົດ, ແລະເຄື່ອງໃຊ້ທັງຫມົດທີ່ພົບເຫັນຢູ່ໃນພຣະວິຫານຂອງພຣະຢາ
ເວ, ແລະ ໃນຄັງຂອງພະຣາຊວັງ, ພ້ອມທັງການຈັບຕົວປະກັນເຊັ່ນດຽວກັນ, ແລະໄດ້ກັບໄປທີ່ເມືອງຊາມາເຣຍ.
[15]ສ່ວນຣາຊະກິດອື່ນໆຂອງເຢໂຮອາດ, ທີ່ໄດ້ຊົງເຮັດ, ທັງອຳນາດຂອງພະອົງ, ແລະການສູ້ຮົບກັບອາມາຊີຢາ ກະສັດແຫ່ງຢູດານັ້ນ,
ໄດ້ບັນທຶກໄວ້ໃນຫນັງສືປະຫວັດຂອງກະສັດແຫ່ງອິສະຣາເອນບໍ່ແມ່ນບໍ?[16]ເຢໂຮອາດໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດ ແລະ
ໄດ້ຊົງຖືກຝັງໄວ້ຢູ່ໃນເມືອງຊາມາເຣຍພ້ອມດ້ວຍບັນດາກະສັດແຫ່ງອິສະຣາເອນ, ແລະ ເຢໂຣໂບອາມ, ລູກຊາຍຂອງພະອົງ,
ໄດ້ຂຶ້ນປົກຄອງແທນ.
[17]ອາມາຊີຢາລູກຊາຍຂອງໂຢອາດ, ກະສັດແຫ່ງຢູດາ, ໄດ້ຊົງມີຊີວິດຢູ່ອີກສິບຫ້າປີ
ຫລັງຈາກເຢໂຮອາດລູກຊາຍຂອງເຢໂຮອາຮາດກະສັດແຫ່ງອິສະຣາເອັນໄດ້ຕາຍໄປແລ້ວ.[18]ສ່ວນຣາຊະກິດອື່ນໆຂອງອາມາຊີຢາ,
ໄດ້ບັນທຶກໄວ້ໃນຫນັງສືປະຫວັດສາດຂອງກະສັດແຫ່ງຢູດາບໍ່ແມ່ນບໍ?[19]ພວກເຂົາໄດ້ເຂົ້າຮ່ວມການກະບົດຕໍ່ອາມາຊີຢາໃນນະຄອນ
ເຢຣູຊາເລັມ, ແລະພະອົງໄດ້ຫລົບຫນີໄປທີ່ເມືອງລາກິດ. ແຕ່ພວກເຂົາທັງຫລາຍໄດ້ສົ່ງຄົນນຳພະອົງໄປທີ່ເມືອງລາກິດ, ແລະໄດ້ຂ້າພະ
ອົງຢູ່ທີ່ນັ້ນ.
[20]ແລະພວກເຂົາໄດ້ນຳເອົາສົບບັນທຸກໃສ່ມ້າກັບມາ, ແລະໄດ້ຝັງໄວ້ກັບບັນພະບຸຣຸດໃນເມືອງຂອງດາວິດ.
[21]ປະຊາຊົນທັງຫມົດຂອງຢູດາກໍຕັ້ງອາຊາຣີຢາ, ເຊິ່ງມີອາຍຸສິບຫົກປີ, ໃຫ້ເປັນກະສັດແທນອາມາຊີຢາພໍ່ຂອງພະອົງ.
[22]ອາຊາຣີຢາໄດ້ຊົງສ້າງເມືອງເອລາດຂຶ້ນໃຫມ່ ແລະ ບູຣະນະໃຫ້ກັບມາຂຶ້ນກັບຢູດາ, ຫລັງຈາກທີ່ກະສັດອາມາຊີຢາໄດ້ຊົງລ່ວງລັບໄປ
ຢູ່ກັບບັນພະບຸຣຸດຂອງທ່ານ.
[23]ໃນປີທີສິບຫ້າແຫ່ງການປົກຄອງຂອງອາມາຊີຢາ ລູກຊາຍຂອງໂຢອາດກະສັດແຫ່ງຢູດາ, ເຢໂຣໂບອາມ
ບຸດຊາຍຂອງໂຢອາດແຫ່ງອິສະຣາເອນໄດ້ປົກຄອງໃນຊາມາເຣຍ; ຢູ່ສີ່ສິບເອັດປີ.[24]ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະເຢວາ. ພ
ຣະອົງບໍ່ໄດ້ຫນີຈາກບາບທັງຫມົດຂອງເຢໂຣໂບອາມລູກຊາຍຂອງເນບັດ. ຜູ້ທີ່ໄດ້ນຳພາອິສະຣາເອນໃຫ້ເຮັດບາບດ້ວຍ.[25]ພະ
ອົງໄດ້ຊົງໂຈມຕີເອົາແຜ່ນດິນອິສະຣາເອນຄືນມາຈາກທາງເຂົ້າເມືອງເລໂບຮາມັດໄກໄປຮອດທະເລອາຣາບາ, ຕາມຄຳສັ່ງຕາມຖ້ອຍຄຳ
ຂອງພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ເຊິ່ງກ່າວໂດຍຜູ້ຮັບໃຊ້ຂອງພຣະອົງຄື ໂຢນາ ລູກຊາຍຂອງອາມິດໄຕ, ຜູ້ທຳນວາຍ, ທີ່ມາຈາກ
ກາດ-ເຮເຟ.
[26]ເພາະວ່າພຣະຢາເວຊົງໄດ້ເຫັນວ່າ ຄວາມທຸກຂອງອິສະຣາເອນ, ນັ້ນຂົມຂື່ນຫລາຍ, ເພາະວ່າບໍ່ມີໃຜເຫລືອຢູ່, ບໍ່ວ່າຈະເປັນຂ້າທາດຫລືບໍ່ເປັນ
ຂ້າທາດ, ແລະບໍ່ມີຜູ້ໃດທີ່ຈະຊ່ອຍກອບກູ້ຊາວອິສະຣາເອັນໄດ້.[27]ເຫດສະນັ້ນ, ພຣະຢາເວບໍ່ໄດ້ກ່າວວ່າ ພຣະ
ອົງຈະບໍ່ເອົາຊື່ອິສະຣາເອນອອກຈາກໃຕ້ທ້ອງຟ້າ; ແຕ່, ພຣະອົງກັບໄດ້ຊົງຊ່ວຍພວກເຂົາດ້ວຍມືຂອງ ເຢໂຣໂບອາມ ລູກຊາຍຂອງເຢໂຮອາດ.
[28]ສ່ວນຣາຊະກິດອື່ນໆຂອງ ເຢໂຣໂບອາມ, ແລະທຸກໆສິ່ງທີ່ໄດ້ຊົງເຮັດ, ແລະອຳນາດຂອງພະອົງ, ການສູ້ຮົບຂອງພະອົງ ແລະເລື່ອງທີ່ໂຈມຕີ
ເອົາເມືອງ ດາມັສກັດ ແລະເມືອງຮາມັດ, ເຊິ່ງເຄີຍເປັນຂອງຢູດາ, ຄືນໃຫ້ແກ່ອິສະຣາເອນ, ໄດ້ບັນທຶກໄວ້ໃນຫນັງ
ສືປະຫວັດຂອງກະສັດແຫ່ງອິສະຣາເອນບໍ່ແມ່ນບໍ?[29]ເຢໂຣໂບອາມໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດ, ຄືບັນດາກະສັດແຫ່ງອິສະຣາເອນ,
ແລ້ວເຊກາຣີຢາລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນ.

 generated on Tue Jun 17 19:01:42 2025

15 1ໃນປີທີຊາວ-ເຈັດ ແຫ່ງການປົກຄອງຂອງ ເຢໂຣໂບອາມກະສັດແຫ່ງອິສະຣາເອນ, ອາຊາຣີຢາບຸດຊາຍຂອງອາມາຊີ
ຢາກະສັດຢູດາໄດ້ຂຶ້ນຄອງບັນລັງ. 2ອາຊາຣີຢາຊົງມີອາຍຸໄດ້ສິບຫົກປີເມື່ອຕອນທີ່ຂຶ້ນປົກຄອງບັນລັງ. ແລະພະອົງໄດ້ປົກຄອງໃນນະຄອນ
ເຢຣູຊາເລັມຫ້າສິບ-ສອງປີ. ແມ່ຂອງພະອົງຊື່ວ່າ ເຢຄີລີຢາ, ແລະນາງໄດ້ມາຈາກນະຄອນ ເຢຣູຊາເລັມ. 3ພະ
ອົງໄດ້ຊົງເຮັດສິ່ງທີ່ຊອບທັມໃນສາຍພຣະເນດຂອງພຣະຢາເວ, ຄືກັບທຸກຢ່າງທີ່ອາມາຊີຢາບິດາຂອງພະອົງໄດ້ຊົງກະທຳ.

4ເຖິງຢ່າງໃດກໍຕາມ, ສະຖານສູງບໍ່ໄດ້ຖືກທຳລາຍ. ປະຊາຊົນກໍຍັງຖວາຍສັດບູຊາ ແລະ ເຜົາເຄື່ອງຫອມເທິງສະຖານສູງເຫລົ່ານັ້ນ. 5ພຣະຢາ
ເວໄດ້ຊົງລົງໂທດກະສັດ ພະອົງໄດ້ຊົງກາຍເປັນຄົນຂີ້ທູດຈົນເຖິງວັນຕາຍ ແລະ ພະອົງຢູ່ໃນພະຣາຊະວັງແຍກຕ່າງຫາກ. ໂຢທາມ,
ລູກຊາຍຂອງກະສັດ, ໄດ້ເປັນຜູ້ເບິ່ງແຍງຄວບຄຸມສຳນັກພະຣາຊະວັງ. ແລະ ໄດ້ຊົງປົກຄອງປະຊາຊົນຂອງແຜ່ນດິນ.
6ສ່ວນຣາຊະກິດອື່ນໆຂອງອາຊາຣີຢາ ແລະ ທຸກສິ່ງທີ່ພະອົງໄດ້ຊົງເຮັດ, ໄດ້ຊົງບັນທຶກໄວ້ໃນຫນັງສືປະຫວັດສາດຂອງກະສັດແຫ່ງຢູດາບໍ່ແມ່ນ
ບໍ? 7ດັ່ງນັ້ນ ອາຊາຣີຢາຈຶ່ງໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດ; ແລະພວກເຂົາໄດ້ຝັງສົບໄວ້ກັບບັນພະບຸຣຸດຂອງພະອົງໃນເມືອງດາວິດ. ໂຢທ
າມລູກຊາຍຂອງພະອົງໄດ້ຊົງຂຶ້ນເປັນກະສັດແທນ.
8ໃນປີທີສາມສິບ-ແປດແຫ່ງການປົກຄອງຂອງອາຊາຣີຢາກະສັດແຫ່ງຢູດາ, ເຊກາຣີຢາລູກຊາຍຂອງເຢໂຣໂບອາມ
ຂຶ້ນປົກຄອງເຫນືອອິສະຣາເອນໃນຊາມາເຣຍເປັນເວລາຫົກເດືອນ. 9ພະອົງກໍໄດ້ຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ,
ຄືກັບບັນພະບຸຣຸດຂອງພະອົງທີ່ຊົງໄດ້ກະທຳ. ພະອົງບໍ່ໄດ້ຊົງປະຖິ້ມບາບຈາກບາບທັງຫລາຍຂອງເຢໂຣໂບອາມລູກຊາຍຂອງເນບັດ,
ຜູ້ທີ່ໄດ້ຊົງນຳອິສະຣາເອນໃຫ້ເຮັດບາບດ້ວຍ.
10ຊານລູມ ລູກຊາຍຂອງຢາເບັດໄດ້ກໍການກະບົດຕໍ່ເຊກາຣີຢາ, ແລະ ໂຄ່ນລົ້ມພະອົງກະສັດລົງໃນອິບເລອາມ, ແລະຂ້າພະອົງ.
ແລະທ່ານໄດ້ຂຶ້ນເປັນກະສັດແທນ. 11ສ່ວນພະຣາຊະກິດອື່ນໆຂອງເຊກາຣີຢາ, ຊົງຖືກບັນທຶກໄວ້ໃນຫນັງ
ສືປະຫວັດຂອງກະສັດແຫ່ງອິສະຣາເອນ. 12ເຫດການນີ້ເປັນໄປຕາມຄຳທີ່ພຣະຢາເວໄດ້ກ່າວແກ່ກັບເຢຮູ, ວ່າ, "ເຊື້ອ
ສາຍຂອງເຈົ້າຈະນັ່ງຢູ່ເທິງບັນລັງຂອງອິສະຣາເອນເປັນເວລາສີ່ຮຸ່ນຄົນ." ແລະກໍເປັນດັ່ງນັ້ນ.
13ຊານລູມລູກຊາຍຂອງຢາເບັດໄດ້ຂຶ້ນຄອງຣາຊໃນປີທີສາມສິບ-ເກົ້າແຫ່ງການປົກຄອງຂອງອາຊາຣີຢາ ກະສັດແຫ່ງຢູດາ, ແລະ ພະ
ອົງໄດ້ປົກຄອງໃນຊາມາເຣຍໄດ້ຫນຶ່ງເດືອນ. 14ເມນາເຮມລູກຊາຍ ຂອງກາດີ ກໍໄດ້ຂຶ້ນຈາກມາເມືອງຕີຣະຊາໄປທີ່ເມືອງຊາມາເຣຍ.
ຢູ່ທີ່ນັ້ນທ່ານໄດ້ໂຄ່ນລົ້ມຊານລູມ ລູກຊາຍຂອງຢາເບັດ, ໃນຊາມາເຣຍ. ແລະໄດ້ຂ້າພະອົງ ແລະ ໄດ້ຊົງຂຶ້ນເປັນກະສັດແທນ.
15ສ່ວນຣາຊກິດອື່ນໆຂອງຊານລູມ ແລະການກະບົດທີ່ພະອົງໄດ້ຊົງເຮັດ, ໄດ້ບັນທຶກໄວ້ໃນຫນັງສືປະຫວັດສາດແຫ່ງອິສະຣາເອນ. 16ຕໍ່ມາ
ເມນາເຮມໄດ້ໂຈມຕີຕັບປູອາ ແລະ ທຸກຄົນທີ່ຢູ່ໃນເມືອງນັ້ນ, ແລະຊາຍແດນຂອງເມືອງນັ້ນຕັ້ງແຕ່ຕີຣະຊາໄປ,
ເພາະວ່າພວກເຂົາບໍ່ໄດ້ເປີດປະຕູໃຫ້ລາວ. ດັ່ງນັ້ນລາວຈຶ່ງໄດ້ໂຈມຕີເມືອງນັ້ນ, ແລະເຂົາກໍໄດ້ຜ່າທ້ອງແມ່ຍິງຖືພາຂອງຫມູ່ບ້ານນັ້ນທຸກຄົນ.
17ໃນປີທີສາມສິບ-ເກົ້າແຫ່ງກະສັດອຸດຊີຢາ ແຫ່ງຢູດາ, ເມນາເຮມ ບຸດຊາຍຂອງກາດີໄດ້ຊົງປົກຄອງເຫນືອອິສະຣາເອນ;
ໃນຊາມາເຣຍເປັນເວລາສິບປີ. 18ພຣະອົງກໍໄດ້ຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ. ຕະຫລອດການປົກຄອງຂອງພະອົງ
ກໍບໍ່ໄດ້ປະຖິ້ມບາບທັງຫລາຍຂອງເຢໂຣໂບອາມບຸດຊາຍຂອງເນບັດ. ຜູ້ໄດ້ຊົງນຳພາອິສະຣາເອນໃຫ້ເຮັດບາບດ້ວຍ.
19ຕໍ່ມາປູລ ກະສັດແຫ່ງອັດຊີເຣຍໄດ້ຊົງຍົກທັບຂຶ້ນມາຕໍ່ສູ້ແຜ່ນດິນນັ້ນ, ແລະ ເມນາເຮມໄດ້ຊົງຖວາຍເງິນຈຳນວນຫນຶ່ງພັນຕະລັນຕົນໃຫ້ແກ່ປູລ,
ເພື່ອໃຫ້ປູລສະຫນັບສະຫນູນພະອົງ ແລະ ຊ່ວຍພະອົງຄຸມອຳນາດໃນອານາຈັກອິສະຣາເອນໄວ້ໄດ້. 20ເມນາເຮມໄດ້
ຊົງຢຶດເງິນຈາກປະຊາຊົນອິສະຣາເອນຄືຈາກຄົນລວຍທຸກຄົນ ຄົນລະຫ້າສິບເຊກຽນເພື່ອຖວາຍແດ່ກະສັດແຫ່ງອັດຊີເຣຍ.
ດັ່ງນັ້ນກະສັດແຫ່ງອັດຊີເຣຍຈຶ່ງຍົກທັບກັບ ແລະ ບໍ່ໄດ້ຢູ່ໃນແຜ່ນດິນນັ້ນ.
21ສ່ວນພະຣາຊະກິດກະອື່ນໆຂອງເມນາເຮມ, ແລະທຸກສິ່ງທີ່ໄດ້ຊົງເຮັດ, ໄດ້ບັນທຶກໄວ້ໃນຫນັງສືປະຫວັດແຫ່ງອິສະຣາເອນບໍ່ແມ່ນບໍ? 22ດັ່ງນັ້ນ
ເມນາເຮມໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດ, ແລະເປກາຮີຢາບຸດຊາຍຂອງພະອົງກໍໄດ້ຂຶ້ນເປັນກະສັດແທນ.
23ໃນປີທີຫ້າສິບແຫ່ງກະສັດອຸດຊີຢາ ກະສັດແຫ່ງຢູດາ, ເປກາຮີຢາບຸດຊາຍຂອງເມນາເຮມຊົງປົກຄອງເຫນືອອິສະຣາເອນໃນຊາມາເຣຍ; ພະ
ອົງປົກຄອງໄດ້ສອງປີ. 24ພະອົງກໍໄດ້ຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ. ພະອົງບໍ່ໄດ້ຊົງປະຖິ້ມບາບທັງຫລາຍຂອງເຢໂຣໂບ
ອາມບຸດຊາຍຂອງເນບັດ, ສະນັ້ນ ພຣະອົງຈຶ່ງໄດ້ຊົງເປັນເຫດໃຫ້ອິສະຣາເອນເຮັດບາບດ້ວຍ.
25ເປກາຮີຢາມີຂ້າຣາຊະການຄົນຫນຶ່ງຊື່ວ່າ ເປກາລູກຊາຍຂອງເຣມາລີຢາ, ຜູ້ທີ່ກໍການກະບົດຕໍ່ພະອົງ. ເປກາຮ່ວມກັບຊາວກີເລອາດຫ້າສິບຄົນ,
ໄດ້ຂ້າເປກາຮີຢາພ້ອມກັບອາໂກບ ແລະ ອາຣີເອໃນປ້ອມປາການຂອງຣາຊະວັງໃນເມືອງຊາມາເຣຍ, ເປກາໄດ້ຂ້າເປກາຮີຢາແລະໄດ້
ຂຶ້ນເປັນກະສັດແທນ. 26ສ່ວນຣາຊະກິດອື່ນໆຂອງເປກາຮີຢາ, ແລະທຸກສິ່ງທີ່ໄດ້ຊົງເຮັດ, ມີບັນທຶກໃນຫນັງ
ສືຂອງພົງສາວະດານກະສັດແຫ່ງອິສະຣາເອນ.
27ໃນປີທີຫ້າສິບ-ສອງແຫ່ງການປົກຄອງອຸດຊີຢາ ກະສັດແຫ່ງຢູດາ, ເປກາລູກຊາຍຂອງເຣມາລີອາໄດ້
ເລີ່ມປົກຄອງອິສະຣາເອນໃນເມືອງຊາມາເຣຍ; ພະອົງຊົງຄອງຣາຊໄດ້ຊາວປີ. 28ພະອົງໄດ້ຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ. ພະ
ອົງບໍ່ໄດ້ຊົງປະຖິ້ມບາບທັງຫລາຍຂອງເຢໂຣໂບອາມລູກຊາຍຂອງເນບັດ, ຜູ້ທີ່ເປັນເຫດເຮັດໃຫ້ອິສະຣາເອນເຮັດບາບດ້ວຍ.
29ໃນລະຫວ່າງການປົກຄອງຂອງເປກາກະສັດແຫ່ງອິສະຣາເອນ, ຕີກະລາດປີເລເສ ກະສັດແຫ່ງອັດຊີເຣຍໄດ້ເຂົ້າມາຢຶດເອົາເມືອງອີໂຢນ,
ອາເບັນເບັດມາອາກາ, ຢາໂນອາ, ຄາເດັດ, ຮາໂຊ, ກີເລອາດ, ຄາລີເລ, ແລະດິນແດນນັບທາລີທັງຫມົດ. ພະອົງຊົງໄດ້ຕ້ອນໂຮມປະຊາຊົນໄປ
ເປັນຊະເລີຍໃນອັດຊີເຣຍ. 30ດັ່ງນັ້ນ ໂຮເຊຢາລູກຊາຍຂອງເອລາໄດ້ຮ່ວມກັນຄິດກະບົດຕໍ່ເປກາລູກຊາຍຂອງເຣມາລີຢາ. ລາວໄດ້ໂຄ່ນລົ້ມພະ
ອົງລົງ ແລະ ປຣະຫານພະອົງ. ແລ້ວລາວກໍໄດ້ຂຶ້ນເປັນກະສັດແທນ, ໃນປີທີຊາວແຫ່ງການປົກຄອງຂອງໂຢທາມລູກຊາຍຂອງອຸດຊີຢາ. 31ສ່ວນ
ຣາຊະກິດອື່ນໆຂອງເປກາ, ແລະທຸກສິ່ງທີໄດ້ຊົງເຮັດ, ມີບັນທຶກໃນຫນັງສືພົງສາວະດານກະສັດແຫ່ງອິສະຣາເອນ.
32ໃນປີທີສອງແຫ່ງການປົກຄອງຂອງເປກາລູກຊາຍຂອງເຣມາລີຢາ, ກະສັດແຫ່ງອິສະລາແອນ, ໂຢທາມບຸດຊາຍຂອງອຸດຊີຢາ,
ກະສັດແຫ່ງຢູດາຊົງໄດ້ຂຶ້ນຄອງລາດ. 33ເມື່ອພະອົງໄດ້ຂຶ້ນຄອງລາດນັ້ນມີອາຍຸໄດ້ຊາວ-ຫ້າປີ; ພະອົງປົກຄອງໄດ້ສິບຫົກປີທີ່ນະຄອນ
ເຢຣູຊາເລັມ. ແມ່ຂອງພະອົງມີຊື່ວ່າເຢຣຸຊາ; ເປັນລູກສາວຂອງຊາໂດກ.


generated on Tue Jun 17 19:01:42 2025

34ໂຢທາມໄດ້ຊົງເຮັດສິ່ງທີ່ຖືກຕ້ອງໃນສາຍຕາຂອງພຣະຢາເວ. ພະອົງໄດ້ຊົງເຮັດທຸກຢ່າງຕາມແບບທີ່ອຸດຊີຢາພໍ່ຂອງພະອົງໄດ້ຊົງເຮັດ.
35ເຖິງຢ່າງໃດກໍ່ຕາມ, ສະຖານສູງຍັງບໍ່ທັນຖືກກຳຈັດເທື່ອ. ປະຊາຊົນຍັງສືບຕໍ່ຖວາຍສັດບູຊາ ແລະ ເຜົາເຄື່ອງຫອມຢູ່ເທິງສະຖານສູງເຫລົ່ານັ້ນ.
ໂຢທາມໄດ້ຊົງສ້າງປະຕູເທິງຂອງພຣະວິຫານແຫ່ງພຣະຢາເວ. 36ສ່ວນພະຣາຊະກິດອື່ນໆຂອງໂຢທາມ, ແລະທຸກຢ່າງທີ່ຊົງໄດ້ເຮັດ,
ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານຂອງກະສັດແຫ່ງຢູດາບໍ່ແມ່ນບໍ? 37ໃນເວລານັ້ນພຣະຢາເວໄດ້ຊົງໃຊ້ເຣຊິນ ກະສັດແຫ່ງອາຣາມ,
ແລະເປກາລູກຊາຍຂອງເຣມາລີຢາໃຫ້ມາສູ້ຮົບກັບຢູດາ. 38ໂຢທາມໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ
ແລະໄດ້ຖືກຝັງໄວ້ກັບບັນພະບຸຣຸດຂອງພະອົງທີ່ເມືອງດາວິດ, ຜູ້ເປັນບັນພະບຸຣຸດຂອງພະອົງ ແລ້ວອາຮາດ, ລູກຊາຍຂອງພະອົງ,
ໄດ້ຂຶ້ນເປັນກະສັດແທນ.

16 [1]ໃນປີທີສິບເຈັດແຫ່ງການປົກຄອງຂອງເປກາຜູ້ເປັນລູກຊາຍຂອງເຣມາລີຢາ; ອາຮາດລູກຊາຍຂອງໂຢທາມກະສັດແຫ່ງຢູດາ, ໄດ້
ຂຶ້ນຄອບຄອງຣາດ.[2]ເມື່ອອາຮາດໄດ້ຊົງກາຍເປັນກະສັດນັ້ນມີອາຍຸໄດ້ພຽງຊາວປີ, ແລະພະອົງໄດ້ປົກຄອງໄດ້ສິບຫົກປີໃນນະຄອນ
ເຢຣູຊາເລັມ. ພະອົງບໍ່ໄດ້ເຮັດສິ່ງທີ່ຊອບທັມໃນສາຍພຣະເນດຂອງພຣະຢາເວອົງເປັນພຣະເຈົ້າຂອງພະອົງ, ຄືກັບດາວິດບັນພະບຸຣຸດຂອງພະ
ອົງໄດ້ຊົງເຮັດ.

[3]ແຕ່ພະອົງຊົງໄດ້ເດີນຕາມເສັ້ນທາງຂອງກະສັດທັງຫລາຍແຫ່ງອິສະຣາເອນ; ເຖິງຈຸດທີ່, ໄດ້ຊົງອະນຸຍາດໃຫ້ລູກຊາຍຂອງພະອົງລຸຍຜ່ານໄຟ,
ຕາມການກະທຳອັນຫນ້າ ກຽດຊັງຂອງປະຊາຊາດທັງຫລາຍ, ຊຶ່ງພຣະຢາເວໄດ້ຊົງຂັບໄລ່ອອກໄປໃຫ້ພົ້ນຫນ້າປະຊາຊົນອິສະຣາເອນ.[4]ພະ
ອົງໄດ້ຖວາຍສັດບູຊາ ແລະ ຈູດເຄື່ອງຫອມຢູ່ທີ່ສະຖານສູງ, ເທິງຍອດພູ, ລວມທັງກ້ອງຕົ້ນໄມ້ສີຂຽວສົດທຸກຕົ້ນ.
[5]ແລ້ວເຣຊິນ, ກະສັດແຫ່ງອາຣາມແລະເປກາລູກຊາຍຂອງເຣມາລີຢາ, ກະສັດແຫ່ງອິສະຣາເອນ, ໄດ້ຍົກທັບຂຶ້ນມາໂຈມຕີນະຄອນ
ເຢຣູຊາເລັມ. ພວກທ່ານທັງສອງໄດ້ອ້ອມອາຮາດໄວ້, ແຕ່ພວກທ່ານທັງສອງບໍ່ຊົງສາມາດເອົາຊະນະພະອົງໄດ້.[6]ໃນເວລານັ້ນ,
ຣາຊິນກະສັດແຫ່ງອາຣາມໄດ້ໂຈມຕີເມືອງເອລັດຄືນໃຫ້ຊາວອາຣາມ ແລະ ໄດ້ຊົງຂັບໄລ່ປະຊາຊົນຢູດາອອກຈາກເອລັດ. ຫລັງຈາກນັ້ນ,
ຊາວຊີເຣຍທີ່ເອລັດ ແລະ ພວກເຂົາໄດ້ຢູ່ທີ່ນັ້ນຈົນເຖິງທຸກມື້ນີ້.
[7]ດັ່ງນັ້ນ ອາຮາດຈຶ່ງໄດ້ຊົງສົ່ງຜູ້ສົ່ງຂ່າວສານໄປເຝົ້າຕີກະລາດປີເລເສ ກະສັດແຫ່ງອັດຊີເຣຍ, ເພື່ອເວົ້າວ່າ, “ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງທ່ານ
ແລະ ເປັນລູກຊາຍຂອງທ່ານ. ຂໍຊົງສະເດັດຂຶ້ນມາຊ່ວຍຂ້າພະເຈົ້າໃຫ້ພົ້ນຈາກກຳມືຂອງກະສັດແຫ່ງຊີເຣຍ ແລະ
ຈາກກຳມືຂອງກະສັດອິສະຣາເອນ, ຜູ້ໄດ້ມາໂຈມຕີຂ້າພະເຈົ້າດ້ວຍເຖີດ.”[8]ດັ່ງນັ້ນ ອາຮາດໄດ້ຊົງນຳເອົາເງິນ ແລະ ທອງຄຳທີ່ພົບເຫັນຢູ່ໃນພຣະ
ນິເວດຂອງພຣະຢາເວ ແລະ ໃນຄັງຂອງພະຣາຊະວັງ ແລະພະອົງໄດ້ສົ່ງໄປເປັນຂອງຂ້ວນມອບແກ່ກະສັດແຫ່ງອັດຊີເຣຍ.
[9]ແລ້ວກະສັດແຫ່ງອັດຊີເຣຍກໍໄດ້ຟັງພະອົງ, ແລະກະສັດແຫ່ງອັດຊີເຣຍກໍໄດ້ຊົງຍົກທັບຂຶ້ນໄປທີ່ເມືອງດາມັສກັດ, ແລະຢຶດໄດ້ທັງຕ້ອນໂຮມປະ
ຊາຊົນຂອງເມືອງນັ້ນໄປເປັນຊະເລີຍທີ່ເມືອງກີຣະ. ພະອົງຍັງໄດ້ຂ້າເຣຊິນກະສັດແຫ່ງຊີເຣຍດ້ວຍເຊັ່ນກັນ.
[10]ເມື່ອກະສັດອາຮາດໄດ້ສະເດັດໄປເມືອງດາມາເຊເພື່ອພົບກັບຕີກະລາດປີເລເສ ກະສັດແຫ່ງອັດຊີເຣຍ. ພະອົງໄດ້ເຫັນແທ່ນບູຊາຢູ່
ທີ່ໃນເມືອງດາມັສກັດ ແລະ ພະອົງໄດ້ຊົງສົ່ງແບບຈຳລອງແທ່ນບູຊາໄປທີ່ປະໂລຫິດອູຣີຢາ ພ້ອມທັງແບບແຜນຂອງແທ່ນບູຊານັ້ນ ແລະ ຮູບແບບ
ສຳລັບວຽກງານກໍ່ສ້າງທີ່ ຈຳເປັນ.
[11]ດັ່ງນັ້ນປະໂລຫິດອູຣີຢາກໍໄດ້ສ້າງແທ່ນບູຊານັ້ນອີງຕາມແບບທຸກຢ່າງທີ່ກະສັດອາຮາດໄດ້ສົ່ງມາຈາກດາມັສກັດ.
ທ່ານຈຶ່ງໄດ້ເຮັດແທ່ນບູຊາໃຫ້ສຳເລັດກ່ອນທີ່ກະສັດອາຮາດສະເດັດກັບມາຈາກດາມັສກັດ.[12]ເມື່ອກະສັດໄດ້ກັບມາຈາກດາມັສກັດ ພະ
ອົງໄດ້ເຫັນແທ່ນບູຊາ; ແລ້ວກະສັດໄດ້ເຂົ້າໄປໃກ້ແທ່ນບູຊາ ແລະຖວາຍເຄື່ອງບູຊາເທິງແທ່ນບູຊານັ້ນ.
[13]ພະອົງໄດ້ຊົງເຜົາຖວາຍເຄື່ອງບູຊາ ແລະ ເຄື່ອງບູຊາພືດຜົນ, ແລະໄດ້ຊົງເທເຄື່ອງດື່ມບູຊາ, ແລະໄດ້ຊົງຊິດເລືອດແຫ່ງເຄື່ອງສານບູຊາ ຂອງພະ
ອົງລົງເທິງແທ່ນບູຊານັ້ນ.[14]ແທ່ນບູຊາທອງເຫລືອງເຊິ່ງຢູ່ສະເພາະພຣະພັກພຣະຢາເວ-ພະອົງໄດ້ຊົງຍ້າຍອອກໄປຈາກທາງຫນ້າຂອງພຣະວິຫານ,
ພື້ນທີ່ລະຫວ່າງແທ່ນບູຊາຂອງພະອົງກັບວິຫານຂອງພຣະຢາເວ ແລະ ໄດ້ຕັ້ງໄວ້ທາງເບື້ອງທິດເຫນືອຂອງແທ່ນບູຊາຂອງພະອົງນັ້ນ.
[15]ແລ້ວກະສັດອາຮາດໄດ້ຊົງສັ່ງໃຫ້ປະໂລຫິດອູຣີຢາ, ວ່າ, "ເທິງແທ່ນໃຫຍ່ນີ້ ທ່ານຈົ່ງເຜົາເຄື່ອງບູຊາໃນຕອນເຊົ້າ ແລະ ເຄື່ອງບູຊາພືດຜົນໃນ
ຕອນແລງ, ແລະເຄື່ອງເຜົາບູຊາຂອງກະສັດ ແລະ ເຄື່ອງບູຊາພືດຜົນຂອງພະອົງ,
ພ້ອມດ້ວຍເຄື່ອງເຜົາບູຊາຂອງປະຊາຊົນທັງຫມົດໃນແຜ່ນດິນ, ລວມທັງພືດຜົນບູຊາ ແລະເຄື່ອງດື່ມບູຊາຂອງພວກເຂົາທັງຫລາຍ.
ຈົ່ງຊິດເລືອດທັງຫມົດຂອງເຄື່ອງເຜົາບູຊາ ແລະ ເລືອດຂອງເຄື່ອງສັດບູຊາມາຖວາຍ. ແຕ່ແທ່ນບູຊາທອງແດງໃຫ້ເປັນທີ່ສຳລັບຂ້າພະເຈົ້າທີ່ຂ້າ
ພະເຈົ້າຈະທູນຖາມພຣະເຈົ້າ.”[16]ປະໂລຫິດອູຣີຢາໄດ້ເຮັດທຸກຢ່າງຕາມຄຳສັ່ງຂອງກະສັດອາຮາດ.
[17]ແລ້ວກະສັດອາຮາດໄດ້ຊົງເອົາແຜງຂອງແທ່ນບູຊານັ້ນອອກໄປ ແລະ ຊົງຍົກຂັນອອກໄປ; ແລະພະອົງໄດ້ນຳເອົາອ່າງທະເລລົງມາຈາກຮູບງົວ
ທອງແດງທີ່ຮອງຢູ່ນັ້ນ ແລະ ໄດ້ຊົງວາງໄວ້ເທິງພື້ນຫີນ.[18]ພະອົງໄດ້ຮື້ເອົາຊິ້ນສ່ວນປິດທາງຍ່າງຂອງສາລາວັນຊະບາໂຕອອກ,
ເຊິ່ງພວກເຂົາໄດ້ສ້າງໄວ້ໃນພະວິຫານ ແລະ ທາງເຂົ້າຊັ້ນນອກສຳລັບກະສັດທີ່ໄດ້ເຂົ້າມາໃນພຣະວິຫານຂອງພຣະຢາເວ,
ເພາະເຫັນແກ່ກະສັດອັດຊີເຣຍ.
[19]ສ່ວນຣາຊະກິດອື່ນໆຂອງອາຮາດທີ່ໄດ້ຊົງເຮັດ, ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານຂອງກະສັດຢູດາບໍ່ແມ່ນບໍ?[20]ອາຮາດໄດ້ຊົງລ່ວງລັບ
ໄປຢູ່ກັບບັນພະບຸລຸດ ແລະ ໄດ້ຊົງຖືກຝັງໄວ້ກັບບັນພະບຸຣຸດໃນເມືອງ ດາວິດ. ເຮເຊກີຢາລູກຊາຍຂອງພະອົງກໍໄດ້ຂຶ້ນເປັນກະສັດແທນ.

 generated on Tue Jun 17 19:01:42 2025

17 1ໃນປີທີສິບສອງແຫ່ງການປົກຄອງຂອງອາຮາດກະສັດແຫ່ງຢູດາ, ໂຮເຊຢາລູກຊາຍຂອງເອລາຂຶ້ນຄອງຣາດ. ພະ
ອົງໄດ້ປົກຄອງຢູ່ໃນເມືອງຊາມາເຣຍໃນອິສະຣາເອນເກົ້າປີ. 2ພະອົງໄດ້ຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍພະເນດຂອງພຣະຢາເວ,
ແຕ່ກໍບໍ່ຄືກັບບັນດາກະສັດແຫ່ງອິສະຣາເອນທີ່ຢູ່ກ່ອນທ່ານ. 3ຊານມາເນເຊ ກະສັດແຫ່ງອັດຊີເຣຍ ໄດ້ຊົງຍົກທັບມາສູ້ຮົບກັບພະອົງ, ແລະ
ໂຮເຊຢາໄດ້ຍອມເປັນເມືອງຂຶ້ນຂອງພະອົງ ແລະ ຖວາຍຂອງຂັວນແກ່ພະອົງ.

4ແລ້ວກະສັດແຫ່ງອັດຊີເຣຍ ຮູ້ວ່າໂຮເຊຢາເປັນຜູ້ກະບົດຕໍ່ພະອົງເພາະວ່າ ໂຮເຊຊາໄດ້ຊົງໃຊ້ຜູ້ສົ່ງຂ່າວສານໄປຫາໂສກະສັດແຫ່ງເອຢິບ; ພະ
ອົງບໍ່ໄດ້ຖວາຍຂອງຂັວນໃຫ້ແກ່ກະສັດແຫ່ງອັດຊີເຣຍ, ຢ່າງທີ່ພະອົງໄດ້ຊົງເຄີຍເຮັດມາທຸກໆປີ. ດັ່ງນັ້ນ ກະສັດແຫ່ງອັດຊີເຣຍຈຶ່ງ
ຊົງຈັບໂຮເຊອາໄວ້ ແລະ ຊົງຂັງພະອົງໄວ້ຢູ່ໃນຄຸກ. 5ແລ້ວກະສັດແຫ່ງອັດຊີເຣຍກໍໄດ້ບຸກເຂົ້າໄປທົ່ວແຜ່ນດິນ, ແລະ ຂຶ້ນມາເຖິງເມືອງຊາມາເຣຍ
ແລະ ໄດ້ລ້ອມເມືອງດັ່ງກ່າວໄວ້ເປັນເວລາສາມປີ. 6ໃນປີທີເກົ້າແຫ່ງການປົກຄອງຂອງໂຮເຊຢາ, ກະສັດແຫ່ງອັດຊີເຣຍໄດ້
ຊົງຢຶດເອົາເມືອງຊາມາເຣຍໄດ້ພະອົງໄດ້ຊົງຕ້ອນໂຮມຄົນອິສະຣາເອນເຂົ້າໄປໃນອັດຊີເຣຍ. ພະອົງໄດ້ໃຫ້ພວກເຂົາຢູ່ໃນເມືອງຮາລາ, ທີ່
ຂ້າງແມ່ນ້ຳຮາໂບແຫ່ງເມືອງໂກຊານ, ແລະ ໃນເມືອງຕ່າງໆຂອງຄົນເມເດຍ.
7ການທີ່ໄດ້ຕົກເປັນຊະເລີຍໃນຄັ້ງນີ້ກໍເພາະວ່າປະຊາຊົນອິສະຣາເອນໄດ້ເຮັດບາບຕໍ່ພຣະຢາເວພຣະເຈົ້າຂອງພວກເຂົາ,
ຜູ້ທີ່ໄດ້ຊົງນຳພວກເຂົາອອກຈາກແຜ່ນດິນເອຢິບ, ຈາກພາຍໃຕ້ກຳມືຂອງຟາຣາໂອກະສັດແຫ່ງເອຢິບ. ເພາະວ່າປະຊາຊົນໄດ້ນະມັສະການບັນ
ດາພະເຈົ້າອື່ນໆ 8ແລະໄດ້ປະພຶດຕາມທຳນຽມຂອງບັນດາປະຊາຊາດ ຊຶ່ງພຣະຢາເວໄດ້ຊົງຂັບໄລ່ໜີໄປໃຫ້ພົ້ນໜ້າຄົນອິສະຣາເອນ,
ແລະປະຕິບັດຕາມຢ່າງທີ່ກະສັດແຫ່ງອິສະຣາເອນທີ່ພວກພະອົງໄດ້ຊົງເຮັດ.
9ປະຊາຊົນອິສະຣາເອນໄດ້ເຮັດສິ່ງ-ທີ່ບໍ່ຖືກຕ້ອງຕໍ່ພຣະຢາເວພຣະເຈົ້າຂອງພວກເຂົາ-ຢ່າງລັບໆ. ເຂົາທັງ
ຫລາຍໄດ້ສ້າງສະຖານສູງສຳລັບຕົນເອງຢູ່ທົ່ວບ້ານທົ່ວເມືອງ, ຕັ້ງແຕ່ທີ່ມີຫໍສັງເກດການຈົນຮອດເມືອງທີ່ມີປ້ອມບັນຊາການ.
10ພວກເຂົາໄດ້ຕັ້ງເສົາທີ່ສັກສິດແລະເສົາຫີນຂອງອາເຊຣາຢູ່ເທິງເນີນພູສູງທຸກແຫ່ງ ແລະ ພາຍໃຕ້ຕົ້ນໄມ້ຂຽວສົດທຸກຕົ້ນ.
11ຢູ່ທີ່ນັ້ນ ພວກເຂົາໄດ້ເຜົາເຄື່ອງຫອມເທິງສະຖານສູງທຸກບ່ອນ, ຕາມຢ່າງປະຊາຊາດທັງຫລາຍໄດ້ເຮັດ,
ຄົນເຫລົ່ານັ້ນທີ່ພຣະຢາເວໄດ້ຊົງກວາດລ້າງໄປໃຫ້ພົ້ນໜ້າພວກເຂົາ. ຊາວອິສະຣາເອນໄດ້ເຮັດສິ່ງທີ່ຊົ່ວຮ້າຍຕ່າງໆ
ເຮັດໃຫ້ພຣະຢາເວຊົງຄຽດແຄ້ນ; 12ພວກເຂົາທັງຫລາຍໄດ້ນະມັສະການຮູບເຄົາຣົບ, ຊຶ່ງພຣະຢາເວໄດ້ກ່າວແກ່ພວກເຂົາແລ້ວວ່າ,
"ທ່ານຢ່າເຮັດແນວນີ້."
13ພຣະຢາເວຍັງໄດ້ຊົງຕັກເຕືອນອິສະຣາເອນ ແລະ ຢູດາ ຜ່ານທາງຜູ້ປະກາດພຣະຄັມ ແລະ ຜູ້ທຳນວາຍທຸກຄົນ, ກ່າວວ່າ, “ຈົ່ງຫັນໜີ
ໄປຈາກທາງທີ່ຊົ່ວທັງຫລາຍຂອງເຈົ້າ ແລະ ຮັກສາພຣະບັນຍັດຂອງເຮົາ ແລະ ກົດເກນຂອງເຮົາ ຕາມກົດບັນ
ຍັດທຸກຂໍ້ທີ່ເຮົາໄດ້ສັ່ງແກ່ບັນພະບຸຣຸດຂອງເຈົ້າ, ແລະ ທີ່ເຮົາໄດ້ສົ່ງມາໃຫ້ເຈົ້າທາງບັນດາຜູ້ປະກາດພຣະຄັມຜູ້ຮັບໃຊ້ຂອງເຮົາ."
14ແຕ່ພວກເຂົາບໍ່ຟັງ; ພວກເຂົາແຂງກະດ້າງຫລາຍຄືກັບບັນພະບຸຣຸດຂອງພວກເຂົາຜູ້ທີ່ບໍ່ເຊື່ອວາງໃຈໃນພຣະຢາເວພຣະເຈົ້າຂອງພວກເຂົາ.
15ພວກເຂົາໄດ້ປະຕິເສດກົດເກນ ແລະ ພັນທະສັນຍາຂອງພຣະອົງ ເຊິ່ງພຣະອົງໄດ້ເຮັດກັບບັນພະບຸຣຸດຂອງພວກເຂົາ,
ລວມທັງຄຳຕັກເຕືອນທີ່ໄດ້ໃຫ້ແກ່ພວກເຂົາ. ພວກເຂົາທັງຫລາຍໄດ້ຕິດຕາມສິ່ງທີ່ບໍ່ມີຄ່າ ແລະ ພວກເຂົາໄດ້ກາຍເປັນຄົນບໍ່ມີຄ່າໄປ.
ພວກເຂົາໄດ້ຕິດຕາມຊົນຊາດທີ່ຢູ່ອ້ອມຂ້າງພວກເຂົາ, ທີ່ບໍ່ໄດ້ນັບຖືພຣະເຈົ້າ ຊຶ່ງພຣະຢາເວໄດ້ຊົງຫ້າມບໍ່ໃຫ້ພວກເຂົາເອົາແບບພວກເຂົາເຫລົ່າ
ນັ້ນ.
16ພວກເຂົາທັງຫລາຍບໍ່ໄດ້ສົນໃຈພຣະບັນຍັດທັງຫມົດ ຂອງພຣະຢາເວພຣະເຈົ້າຂອງພວກເຂົາ. ພວກເຂົາໄດ້ສ້າງຮູບເຄົາຣົບດ້ວຍໂລຫະປັ້ນ
ເປັນລູກງົວສອງໂຕເພື່ອນະມັສະການ. ແລະພວກເຂົາໄດ້ສ້າງເສົາອາເຊຣາ, ແລະ ພວກເຂົາກໍນະມັສະການດວງດາວຕ່າງໆໃນທ້ອງຟ້າ ແລະ
ພະບາອານ. 17ພວກເຂົາໄດ້ເອົາລູກຊາຍຍິງຂອງພວກເຂົາລຸຍໄຟ, ແລະພວກເຂົາໄດ້ທຳນວາຍໂຊກຊະຕາ ແລະເຮັດເວດມົນຄາຖາ, ທັງ
ໄດ້ຂາຍຕົວເອງເພື່ອໄປເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ, ແລະ ໄດ້ສ້າງຄວາມໃຈຮ້າຍໃຫ້ພຣະອົງ. 18ເພາະສະນັ້ນ ພຣະຢາ
ເວໃຈຮ້າຍຕໍ່ອິສະຣາເອນຫລາຍ ແລະ ໄດ້ຊົງໃຫ້ພວກເຂົາອອກໄປຈາກທີ່ປຣະທັບຂອງພຣະອົງ. ບໍ່ມີໃຜເຫລືອຢູ່ເລີຍນອກຈາກເຜົ່າຢູດາເທົ່າ
ນັ້ນ.
19ແມ່ນແຕ່ເຜົ່າຂອງຢູດາບໍ່ໄດ້ຮັກສາພຣະບັນຍັດຂອງພຣະຢາເວ ພຣະເຈົ້າຂອງພວກເຂົາ. ແຕ່ປະຕິບັດຕາມ ຄຳ
ສອນທີ່ຊາວອິສະຣາເອນໄດ້ເຮັດ. 20ດັ່ງນັ້ນ ພຣະຢາເວຈຶ່ງປະຕິເສດເຊື້ອສາຍຂອງອິສະຣາເອນທັງຫມົດ;
ພຣະອົງໄດ້ຊົງເຮັດໃຫ້ພວກເຂົາທຸກທໍຣະມານ ແລະໄດ້ມອບພວກເຂົາໄວ້ໃນມືຂອງໂຈນ, ຈົນກ່ວາພຣະອົງໄດ້ຊົງໂຍນພວກເຂົາພົ້ນຈາກພຣະພັກ
ຂອງພຣະອົງ.
21ພຣະອົງໄດ້ຊົງຈີກອິສະຣາເອນຈາກຣາຊະວົງຂອງດາວິດ, ແລະພວກເຂົາໄດ້ຕັ້ງເຢໂຣໂບອາມລູກຊາຍຂອງເນບັດໃຫ້ເປັນກະສັດ. ເຢໂຣໂບ
ອາມໄດຊົງຊັກນຳອິສະຣາເອນໄປຈາກການຕິດຕາມພຣະຢາເວ ແລະຊົງເຮັດໃຫ້ພວກເຂົາກະທຳບາບຢ່າງໃຫຍ່ຫລວງ.
22ປະຊາຊົນອິສະຣາເອນໄດ້ເດີນໄປໃນຄວາມບາບທຸກຢ່າງຂອງເຢໂຣໂບອາມໄດ້ຊົງເຮັດ ພວກເຂົາບໍ່ໄດ້ປະຖິ້ມຈາກບາບເຫລົ່ານັ້ນເລີຍ, 23ດັ່ງນັ້ນ
ພຣະຢາເວໄດ້ຊົງໃຫ້ຊາວອິສະຣາເອນອອກໄປໃຫ້ພົ້ນຈາກທີ່ປຣະທັບຂອງພຣະອົງ, ຕາມທີ່ກ່າວທາງບັນດາຜູ້ປະກາດພຣະຄັມຜູ້ຮັບໃຊ້ຂອງພ
ຣະອົງ. ດັ່ງນັ້ນຊາວອິສະຣາເອນຈຶ່ງຖືກຢຶດເອົາຈາກດິນແດນຂອງຕົນໄປເປັນຊະເລີຍໃນອັດຊີເຣຍ, ແລະຈົນເຖິງທຸກມື້ນີ້.
24ກະສັດແຫ່ງອັດຊີເຣຍໄດ້ຊົງນຳປະຊາຊົນຈາກບາບີໂລນ ແລະ ຈາກກູດ, ອີວາ, ຮາມັດ, ເສຟາກວາອິມ,
ແລະໄດ້ໃຫ້ພວກເຂົາອາສັຍຢູ່ໃນເມືອງຕ່າງໆ, ຂອງຊາມາເຣຍແທນປະຊາຊົນອິສະຣາເອນ. ພວກເຂົາໄດ້ເຂົ້າຢຶດເອົາເມືອງຊາມາເຣຍ ແລະ
ໄດ້ອາສັຍຢູ່ໃນເມືອງເຫລົ່ານັ້ນ. 25ສິ່ງນີ້ໄດ້ເກີດຂຶ້ນຕັ້ງແຕ່ທຳອິດທີ່ພວກເຂົາມາອາສັຍຢູ່ບ່ອນນັ້ນ ພວກເຂົາກໍບໍ່ໄດ້ໃຫ້ກຽຕພຣະຢາເວ. ສະນັ້ນ
ພຣະຢາເວຈຶ່ງໄດ້ຊົງສົ່ງສິງໂຕໄປຂ້າບາງຄົນໃນບັນດາພວກເຂົາ. 26ເພາະສະນັ້ນ ມີຜູ້ໄດ້ໄປກ່າວກັບກະສັດອັດຊີເຣຍ, ວ່າ, "ບັນດາປະຊາ
ຊາດທີ່ທ່ານໄດ້ນຳພາໄປຢູ່ໃນເມືອງຕ່າງໆຂອງຊາມາເຣຍນັ້ນ ບໍ່ຮູ້ປະເພນີປະຕິບັດຂອງພະເຈົ້າຂອງແຜ່ນດິນນັ້ນ, ສະນັ້ນພະຈຶ່ງໃຫ້ສິງ
ໂຕມາຢູ່ໃນບັນດາພວກເຂົາ, ແລະ, ເບິ່ງແມ, ພວກສິງໂຕໄດ້ຂ້າພວກເຂົາຢູ່ທີ່ນັ້ນ ເພາະວ່າພວກເຂົາບໍ່ຮູ້ຮີດຄອງປະເພນີປະຕິ
ບັດຂອງພະເຈົ້າໃນແຜ່ນດິນນັ້ນ."

 generated on Tue Jun 17 19:01:42 2025

[27]ແລ້ວກະສັດອັດຊີເຣຍຈຶ່ງໄດ້, ສັ່ງວ່າ, “ຈົ່ງນຳເອົາປະໂລຫິດຄົນຫນຶ່ງທີ່ພວກເຈົ້າໄດ້ກວາດຕ້ອນຈາກຊາມາເຣຍກັບໄປຢູ່ທີ່ນັ້ນ,
ແລະໃຫ້ພວກເຂົາສັ່ງສອນຕາມຮີດຄອງປະເພນີຂອງພະຕ່າງໆໃນແຜ່ນດິນນັ້ນ.”[28]ສະນັ້ນພວກປະໂລຫິດຄົນຫນຶ່ງທີ່ພວກເຂົາໄດ້ກວາດ
ຕ້ອນມາຈາກຊາມາເຣຍ ແລະ ໄດ້ອາສັຍຢູ່ໃນເມືອງເບັດເອນ; ເຂົາໄດ້ສັ່ງສອນພວກເຂົາເຖິງການທີ່ພວກເຂົາຈະຖວາຍກຽດແດ່ພຣະຢາເວ.
[29]ແຕ່ວ່າທຸກປະຊາຊາດທັງຫມົດຍັງສ້າງພວກຮູບພະເຈົ້າຂອງຕົນເອງ, ແລະຕັ້ງໄວ້ໃນເຮືອນແຫ່ງສະຖານສູງຕ່າງໆ ຊຶ່ງຊາວຊາມາເຣຍໄດ້ສ້າງ-
ໄວ້ໃນເມືອງຕ່າງໆ ທີ່ທຸກປະຊາຊາດທັງຫມົດອາສັຍຢູ່.[30]ປະຊາຊົນຊາວບາບີໂລນໄດ້ສ້າງພະຊຸກໂກດເບໂນດ; ປະຊາຊົນຊາວກູທໄດ້ສ້າງພະເນ
ການ; ປະຊາຊົນຊາວຮາມັດໄດ້ສ້າງພະອາຊີມາ.[31]ຄົນອິບວາໄດ້ສ້າງພະນິບຮາດ ແລະ ພະຕາກຕັກ. ຄົນເສ
ຟາກວາອິມໄດ້ເຜົາລູກຂອງຕົນໃນໄຟເພື່ອຖວາຍພະອັດຣຳເມເລັກ ແລະ ພະອານາມເມເລັກ, ເຊິ່ງເປັນພະເຈົ້າຂອງຊາວເສຟາກວາອິມ.
[32]ພວກເຂົາຍັງໄດ້ຖວາຍກຽດແດ່ພຣະຢາເວດ້ວຍ, ແລະໄດ້ຕັ້ງນັກບວດແຫ່ງສະຖານສູງ, ຈາກທ່າມກາງພວກເຂົາໃຫ້ເຮັດຫນ້າທີ່ເພື່ອພວກ
ເຂົາໃນສາລາແຫ່ງສະຖານສູງ.[33]ພວກເຂົາຍັງໄດ້ຖວາຍກຽດແດ່ພຣະຢາເວ ແລະ ໄດ້ນະມັສະການບັນດາພະເຈົ້າຂອງພວກເຂົາເອງດ້ວຍ,
ຕາມປະເພນີຂອງບັນດາປະຊາຊາດຈາກທ່າມກາງພວກທີ່ໄດ້ກວາດຕ້ອນພວກເຂົາມາ.
[34]ໃນທຸກວັນນີ້ພວກເຂົາກໍຍັງຄົງປະຕິບັດຕາມຮີດຄອງເກົ່າຂອງພວກເຂົາ. ພວກເຂົາທັງຫລາຍບໍ່ໄດ້ຖວາຍກຽດແດ່ພຣະຢາເວ,
ແລະບໍ່ປະຕິບັດຕາມກົດລະບຽບ, ຫລືກົດຫມາຍ, ຫລືກົດບັນຍັດ, ຫລືພຣະບັນຍັດຕ່າງໆ ຊຶ່ງພຣະຢາເວໄດ້ຊົງບັນຊາແກ່ຄົນ-ຂອງຢາໂຄບ ຜູ້ທີ່
ພຣະອົງໄດ້ຕັ້ງຊື່ໃຫ້ວ່າອິສະຣາເອນ-[35]ແລະຜູ້ທີ່ພຣະຢາເວໄດ້ຊົງເຮັດພັນທະສັນຍາກັບພວກເຂົາທັງຫລາຍ ແລະ ໄດ້ຊົງສັ່ງພວກເຂົາວ່າ,
"ຢ່າຢຳເກງພະເຈົ້າອົງອື່ນໆ, ຫລືກາບນະມັສະການພະນັ້ນ, ຫລືບົວລະບັດ, ຫລືຖວາຍສັດບູຊາແກ່ພະນັ້ນ.
[36]ແຕ່ເຈົ້າຈົ່ງຢຳເກງພຣະຢາເວ, ຜູ້ທີ່ໄດ້ນຳເຈົ້າອອກຈາກແຜ່ນດິນເອຢິບ ດ້ວຍຣິດອຳນາດອັນຍິ່ງໃຫຍ່ ແລະດ້ວຍພຣະຫັດທີ່ເດ່ອອກ,
ເຈົ້າຈົ່ງຖວາຍພຣະກຽດພຣະອົງ; ແລະຈົ່ງຖວາຍສັດບູຊາແດ່ພຣະອົງ, ແລະມັນແມ່ນການທີ່ເຈົ້າຈະເສຍສະຫລະ.[37]ກົດລະບຽບ, ກົດຫມາຍ
ແລະທຳບັນຍັດ ແລະພຣະບັນຍັດຕ່າງໆ ຊຶ່ງພຣະອົງໄດ້ຈາຣຶກໄວ້ສຳລັບພວກເຈົ້າ, ເຈົ້າຈົ່ງຣະວັງທີ່ຈະເຮັດຕາມສະເຫມີ. ດັ່ງນັ້ນເຈົ້າບໍ່ຕ້ອງຢຳ
ເກງພະເຈົ້າອື່ນໃດເລີຍ,[38]ແລະເຈົ້າຢ່າລືມຄຳ ສັນຍາທີ່ເຮົາໄດ້ເຮັດໄວ້ກັບເຈົ້າ, ເຈົ້າບໍ່ຕ້ອງລືມ; ຢ່າຖວາຍກຽດບັນດາພະເຈົ້າອື່ນເລີຍ.
[39]ແຕ່ເຈົ້າທັງຫລາຍຈົ່ງຖວາຍກຽດແກ່ພຣະຢາເວພຣະເຈົ້າຂອງເຈົ້າ. ແລະພຣະອົງຈະໄດ້ຊົງຊ່ອຍກູ້
ພວກເຈົ້າໃຫ້ພົ້ນຈາກອຳນາດຂອງສັດຕຣູທັງຫມົດຂອງພວກເຈົ້າ."[40]ພວກເຂົາບໍ່ຍອມຟັງ, ເພາະວ່າພວກເຂົາຍັງໄດ້ຄົງສືບຕໍ່ເຮັດສິ່ງທີ່ໄດ້
ເຮັດໃນອະດີດເລື້ອຍໆ.[41]ດັ່ງນັ້ນປະຊາຊາດເຫລົ່ານີ້ຈຶ່ງບໍ່ໄດ້ຢຳເກງພຣະຢາເວ ແລະ ພວກເຂົາກໍໄດ້ຂາບໄຫວ້ຮູບປັ້ນເຄົາຣົບແກະສະ
ຫລັກຂອງພວກເຂົາດ້ວຍ, ພວກລູກຂອງພວກເຂົາກໍໄດ້ເຮັດ-ເຊັ່ນດຽວກັນ. ຫລານຂອງພວກເຂົາກໍໄດ້ເຮັດເຊັ່ນດຽວກັນ.
ພວກເຂົາກໍຍັງເຮັດໃນສິ່ງທີ່ບັນພະບຸຣຸດຂອງພວກເຂົາໄດ້ເຮັດ, ຈົນເຖິງທຸກວັນນີ້.

 generated on Tue Jun 17 19:01:42 2025

18 1ບັດນີ້ ໃນປີທີສາມແຫ່ງໂຮເຊຢາລູກຊາຍຂອງເອລາ, ກະສັດແຫ່ງອິສະຣາເອນ, ເຮເຊກີຢາລູກຊາຍຂອງອາຮາດ, ກະສັດແຫ່ງຢູດາໄດ້ຊຶ່ງ
ຂຶ້ນຄອງຣາຊ. 2ເມື່ອພະອົງໄດ້ປົກຄອງຣາຊນັ້ນ; ພະອົງມີອາຍຸຊາວ-ຫ້າປີ ພະອົງໄດ້ປົກຄອງຣາຊໃນນະຄອນ ເຢຣູຊາເລັມຊາວ-ເກົ້າປີ.
ແມ່ຂອງພະອົງມີຊື່ວ່າ ອາບີຢາ; ນາງເປັນລູກສາວຂອງເຊກາຣີຢາ. 3ພະອົງໄດ້ເຮັດສິ່ງທີ່ຊອບທັມໃນສາຍພະເນດຂອງພຣະຢາເວ, ຕາມທີ່ດາວິດ,
ບັນພະບຸຣຸດຂອງພະອົງ, ໄດ້ເຮັດແບບຢ່າງໄວ້ທັງຫມົດ.

4ພະອົງໄດ້ຊຶ່ງທຳລາຍສະຖານສູງຖິ້ມໄປ, ໄດ້ທຳລາຍເສົາຫີນສັກສິດ, ແລະໄດ້ຊຶ່ງໂຄ່ນລົ້ມພວກເສົາຂອງອາເຊຣາລົງ. ພະອົງໄດ້
ຊຶ່ງທຳລາຍງູທອງແດງທີ່ໂມເຊໄດ້ສ້າງຂຶ້ນນັ້ນເປັນຕ່ອນໆ, ເພາະວ່າຊາວອິສະຣາເອນໄດ້ເຜົາເຄື່ອງຫອມໃຫ້ແກ່ງູນັ້ນຈົນຮອດມື້ເຫລົ່ານັ້ນ;
ງູນັ້ນເອີ້ນວ່າ "ເນຣູຊະຕານ."5ເຮເຊກີຢາໄດ້ຊຶ່ງວາງໃຈໃນອົງພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ເພາະສະນັ້ນໃນບັນດາກະສັດແຫ່ງຢູດາຫລັງຈາກພະອົງມາ, ຫລືໃນບັນດາຜູ້ທີ່ຢູ່ກ່ອນພະອົງ ບໍ່ມີຜູ້ໃດຄືກັບພະອົງ.
6ເພາະວ່າພະອົງໄດ້ຊຶ່ງວາງໃຈໃນພຣະຢາເວຢ່າງຫມັ້ນຄົງ. ພະອົງບໍ່ໄດ້ຢຸດການຕິດຕາມພຣະອົງເລີຍ, ແຕ່ໄດ້ຊຶ່ງຮັກສາພຣະບັນຍັດທີ່ພຣະຢາ
ເວໄດ້ຊຶ່ງສັ່ງໂມເຊ. 7ດັ່ງນັ້ນ ພຣະຢາເວໄດ້ສະຖິດຢູ່ກັບເຮເຊກີຢາ ແລະ ພະອົງໄດ້ຊຶ່ງປະສົບຜົນສຳເລັດທຸກບ່ອນທີ່ພະອົງໄດ້ຊຶ່ງເຮັດ. ພະ
ອົງໄດ້ຊຶ່ງກະບົດຕໍ່ກະສັດແຫ່ງອັດຊີເຣຍ ແລະປະຕິເສດທີ່ຈະຮັບໃຊ້ພະອົງ. 8ພະອົງໄດ້ໂຈມຕີຊາວຟີລິສະຕິນໄປຈົນເຖິງເມືອງກາຊາ ແລະ ດິນ
ແດນອ້ອມແອ້ມໃນບໍຣິເວນນັ້ນ, ຕັ້ງແຕ່ຫໍຄອຍຈົນເຖິງປ້ອມປາການ.
9ໃນປີທີສີ່ແຫ່ງການປົກຄອງຂອງເຮເຊກີຢາ, ເຊິ່ງເປັນປີທີເຈັດແຫ່ງການປົກຄອງຂອງ ໂຮເຊຢາ ລູກຊາຍຂອງ ເອລາ ກະສັດແຫ່ງອິສະຣາເອນ,
ຊານມາເນເຊ ກະສັດແຫ່ງອັດຊີເຣຍໄດ້ຍົກທັບຂຶ້ນມາຕໍ່ສູ້ກັບຊາມາເຣຍ ແລະ ອ້ອມຮອບຕົວເມືອງໄວ້. 10ພາຍໃນເວລາສາມປີກໍຢຶດເອົາເມືອງນັ້ນ
ໄດ້, ໃນປີທີຫົກແຫ່ງການປົກຄອງຂອງເຮເຊກີຢາ, ເຊິ່ງເປັນປີທີເກົ້າແຫ່ງການປົກຄອງຂອງ ໂຮຊາຢາ ກະສັດແຫ່ງອິສະຣາເອນ;
ເມືອງຊາມາເຣຍກໍຖືກຢຶດຄອງໄປໄດ້.
11ດັ່ງນັ້ນກະສັດແຫ່ງອັດຊີເຣຍໄດ້ກວາດຕ້ອນຊາວອິສະຣາເອນໄປທີ່ອັດຊີເຣຍ ແລະໄດ້ນຳພາພວກເຂົາໄປໄວ້ທີ່ ຮາລາ, ແລະທີ່ແມ່ນ້ຳ ຮາໂບ
ແຫ່ງເມືອງໂກຊານ, ແລະໃນເມືອງຕ່າງໆຂອງຊາວເມເດຍ. 12ພຣະອົງໄດ້ຊຶ່ງເຮັດໃນສິ່ງນີ້ເພາະວ່າພວກເຂົາບໍ່ເຊື່ອຟັງພຣະສຸ
ຣະສຽງຂອງພຣະຢາເວພຣະເຈົ້າຂອງພວກເຂົາ, ແຕ່ພວກເຂົາໄດ້ເຮັດຜິດຕໍ່ຂໍ້ກຳນົດຂອງພັນທະສັນຍາຂອງພຣະອົງ, ຄືໄດ້ເຮັດຜິດຕໍ່ທຸກຢ່າງ
ເຊິ່ງໂມເຊຜູ້ຮັບໃຊ້ຂອງພຣະຢາເວໄດ້ສັ່ງໄວ້. ພວກເຂົາທັງຫລາຍໄດ້ປະຕິເສດທີ່ຈະເຊື່ອຟັງ ຫລື ປະຕິບັດຕາມ.
13ແລ້ວໃນປີທີສິບສີ່ແຫ່ງການປົກຄອງຂອງກະສັດເຮເຊກີຢາ, ເຊນນາຄາເລັດ ກະສັດແຫ່ງອັດຊີເຣຍໄດ້ຍົກທັບຂຶ້ນຕໍ່ສູ້ກັບບັນດາເມືອງທີ່ມີປ້ອມ
ກຳບັງຂອງຢູດາ ແລະ ຢຶດເມືອງເຫລົ່ານັ້ນໄດ້. 14ດັ່ງນັ້ນເຮເຊກີຢາກະສັດແຫ່ງຢູດາໄດ້ໃຊ້ຄົນໄປກ່າວແກ່ກະສັດແຫ່ງອັດຊີເຣຍ, ໃນເມືອງລາກິດ,
ວ່າ, "ຂ້າພະເຈົ້າໄດ້ເຮັດຜິດຕໍ່ທ່ານ. ຂໍໃຫ້ທ່ານກະຣຸນາຖອນທັບໄປຈາກຂ້າພະເຈົ້າ. ຂ້າພະເຈົ້າຈະຍອມເສຍເຄື່ອງບັນນາ
ການຕາມທີ່ທ່ານຮຽກຮ້ອງ." ແລະກະສັດແຫ່ງອັດຊີເຣຍໄດ້ຮຽກຮ້ອງເອົາຈາກເຮເຊກີຢາກະສັດແຫ່ງຢູດາເປັນເງິນສາມຮ້ອຍຕະລັນ ແລະ
ທອງຄຳສາມສິບຕະລັນ. 15ດັ່ງນັ້ນ ເຮເຊກີຢາໄດ້ມອບເງິນທັງຫມົດທີ່ຢູ່ໃນພຣະນິເວດຂອງພຣະຢາເວ ແລະ ໃນຄັງຂອງພຣະຣາຊວັງຂອງກະສັດ.
16ແລ້ວເຮເຊກີຢາຊຶ່ງໄດ້ລອກເອົາທອງຄຳຈາກປະຕູທັງຫລາຍຂອງພຣະວິຫານຂອງພຣະຢາເວ. ແລະຈາກເສົາປະຕູທັງຫລາຍ
ເຊິ່ງເຮເຊກີຢາກະສັດແຫ່ງຢູດາໄດ້ຫຸ້ມໄວ້; ພະອົງໄດ້ມອບແກ່ກະສັດແຫ່ງອັດຊີເຣຍ.
17ແຕ່ກະສັດແຫ່ງອັດຊີເຣຍໄດ້ຊຶ່ງສັ່ງໃຫ້ຍ້າຍກອງທັບອັນຍິ່ງໃຫຍ່ຂອງຕົນ, ໂດຍການສົ່ງຣາທານ ແລະ ຮັບຊາຣິສ ແລະ
ຜູ້ບັນຊາການໃຫຍ່ຈາກເມືອງ ລາກິດ ເພື່ອໄປພົບກະສັດເຮເຊກີຢາທີ່ນະຄອນ ເຢຣູຊາເລັມ. ພວກເຂົາກໍໄດ້ຂຶ້ນໄປທາງຖະຫນົນ ແລະ
ໄປຮອດທາງນອກນະຄອນ ເຢຣູຊາເລັມ. ພວກເຂົາຍ່າງທັບເຂົ້າມາໃກ້ບໍຣິເວນທາງເທິງຮ່ອງລະບາຍສະນ້ຳ,
ເຊິ່ງເປັນເສັ້ນທາງຂອງການຊັກລ້າງ, ແລະ ໄດ້ຢຸດທັບຢູ່ທີ່ນັ້ນ. 18ເມື່ອພວກເຂົາຮ້ອງຫາກະສັດເຮເຊກີຢາ, ອີລີຢາກິມລູກຊາຍຂອງ ຮິນກີຢາ,
ຜູ້ເຈົ້າຫນ້າທີ່ໃນຣາຊະວັງ, ເຊັບນາຣາຊະອາລັກ; ແລະ ໂຢອາ ລູກຊາຍຂອງອາຊັບ, ຣາຊເລຂາ, ໄດ້ອອກມາພົບພວກເຂົາ.
19ດັ່ງນັ້ນ ຜູ້ບັນຊາການໃຫຍ່ຈຶ່ງເວົ້າກັບພວກເຂົາໃຫ້ໄປບອກເຮເຊກີຢາ ກະສັດແຫ່ງອັດຊີເຣຍ, ວ່າ: "ແມ່ນຫຍັງ
ຄືແຫລ່ງຂອງຄວາມວາງໃຈຂອງພວກທ່ານ? 20ພວກທ່ານເວົ້າແຕ່ສິ່ງທີ່ບໍ່ມີປະໂຫຍດ, ກ່າວວ່າມີພັນທະມິດ ແລະແສນຍານຸພາບເພື່ອການ
ສ້າງສົງຄາມ. ບັດນີ້ ພວກທ່ານໄວ້ໃຈໃນຜູ້ໃດ? ມີໃຜຫລືທີ່ມອບຄວາມກ້າຫານໃຫ້ພວກທ່ານເພື່ອຕໍ່ສູ້ຂ້າພະເຈົ້າ? 21ຈົ່ງເບິ່ງເຖີດ, ທ່ານອາສັຍໄມ້
ຄ້ຳເທົ້າຂອງຕົນກົກທີ່ຫັກຄືປະເທດເອຢິບ, ເຊິ່ງຈະຕຳມືຂອງຜູ້ທີ່ໃຊ້ໄມ້ເທົ້ານັ້ນ, ນັ້ນແມ່ນຟາຣາໂອ ກະສັດແຫ່ງເອຢິບເປັນເຊັ່ນນີ້ຕໍ່ທຸກຄົນທີ່ອາ
ສັຍລາວ.
22ແຕ່ຖ້າທ່ານທັງຫລາຍຈະບອກຂ້າພະເຈົ້າວ່າ, 'ພວກທ່ານເພິ່ງພຣະຢາເວພຣະເຈົ້າຂອງພວກທ່ານ,' ກໍສະຖານສູງ ແລະ
ແທ່ນບູຊາຂອງພຣະເຈົ້ານັ້ນບໍ່ແມ່ນບໍທີ່ເຮເຊກີຢາທຳລາຍມັນລົງ, ແລະກ່າວກັບຢູດາ ແລະເຢຣູຊາເລັມວ່າ, 'ທ່ານທັງຫລາຍຈົ່ງນະມັສະການທີ່
ຫນ້າ ແທ່ນບູຊານີ້ໃນນະຄອນ ເຢຣູຊາເລັມ'? 23ດັ່ງນັ້ນ, ມາເຮັດຂໍ້ຕໍ່ລອງກັບກະສັດແຫ່ງອັດຊີເຣຍເຈົ້ານາຍຂອງຂ້າພະເຈົ້າ. ແລ້ວຂ້າພະ
ເຈົ້າຈະໃຫ້ມ້າສອງພັນໂຕແກ່ທ່ານ, ຖ້າທ່ານສາມາດຊອກຫາຄົນຂີ່ມ້າເຫລົ່ານັ້ນໄດ້.
24ທ່ານຈະຕ້ານທານກັບນາຍທະຫານຄົນດຽວໃນຫມູ່ຂ້າຣາຊການຜູ້ອ່ອນແອທີ່ສຸດຂອງເຈົ້ານາຍຂ້າພະເຈົ້າໄດ້ແນວໃດ? ເພາະວ່າທ່ານຍັງອາ
ສັຍປະເທດເອຢິບ ເລື່ອງຣົດມ້າຮົບ ແລະຣົດມ້າທະຫານ! 25ຂ້າພະເຈົ້າໄດ້ເດີນທາງມາທີ່ນີ້ໂດຍທີ່ບໍ່ມີພຣະຢາເວ ໃນສະຖານທີ່ນີ້ເພື່ອຕໍ່ສູ້ ແລະ
ທຳລາຍບໍ? ພຣະຢາເວໄດ້ກ່າວກັບຂ້າພະເຈົ້າວ່າ, 'ຈົ່ງຂຶ້ນໄປຕໍ່ສູ້ກັບແຜ່ນດິນນີ້ ແລະທຳລາຍມັນ.'"
26ແລ້ວເອລີອາກິມ ລູກຊາຍຂອງຮິນກີຢາ, ແລະ ເຊັບນາ, ແລະ ໂຢອາດໄດ້ເວົ້າກັບຜູ້ບັນຊາການໃຫຍ່ວ່າ,
"ຂໍເວົ້າກັບຜູ້ຮັບໃຊ້ຂອງທ່ານດ້ວຍພາສາອາຣາມເຖີດ, ເພາະວ່າພວກຂ້າພະເຈົ້າເຂົ້າໃຈພາສານັ້ນ. ຢ່າເວົ້າກັບຂ້າພະເຈົ້າດ້ວຍພາສາຢູດາໃຫ້
ເຂົ້າຫູປະຊາຊົນຜູ້ຢູ່ເທິງກຳແພງນັ້ນເລີຍ." 27ແຕ່ຜູ້ບັນຊາການໃຫຍ່ໄດ້ເວົ້າກັບພວກເຂົາທັງຫລາຍວ່າ, "ເຈົ້ານາຍຂອງຂ້າພະເຈົ້າໃຊ້ໃຫ້ມາເວົ້າ
ຖ້ອຍຄຳເຫລົ່ານີ້ແກ່ເຈົ້ານາຍຂອງທ່ານ ແລະ ແກ່ທ່ານເທົ່ານັ້ນບໍ? ບໍ່ແມ່ນໃຫ້ເວົ້າກັບຄົນທີ່ນັ່ງຢູ່ເທິງກຳແພງ, ຜູ້ທີ່ຈະຕ້ອງກິນອາຈົມ ແລະ ດື່ມ
ຍ່ຽວຂອງພວກເຂົາເອງພ້ອມກັບທ່ານດ້ວຍບໍ?"
28ແລ້ວຜູ້ບັນຊາການໃຫຍ່ໄດ້ຢືນຮ້ອງສຽງດັງເປັນພາສາເຮັບເລີ, ວ່າ, "ຈົ່ງຟັງຖ້ອຍຄຳຂອງກະສັດຣາທິຣາຊ, ກະສັດແຫ່ງອັດຊີເຣຍ.
29ກະສັດກ່າວວ່າ, 'ຢ່າໃຫ້ເຮເຊກີຢາ ຫລອກລວງທ່ານທັງຫລາຍ, ເພາະວ່າລາວຈະບໍ່ສາມາດຊ່ວຍທ່ານໃຫ້ພົ້ນຈາກອຳນາດຂອງຂ້າພະເຈົ້າ.

30ຢ່າໃຫ້ເຮເຊກີຢາເຮັດໃຫ້ທ່ານເພິ່ງພຣະຢາເວ, ໂດຍກ່າວວ່າ, "ພຣະຢາເວຈະໄດ້ຊົງຊ່ອຍກູ້ພວກຂ້າພະເຈົ້າແນ່ນອນ, ແລະ ຈະບໍ່ໄດ້
ຊົງມອບເມືອງນີ້ໄວ້ໃນກຳມືຂອງກະສັດແຫ່ງອັດຊີເຣຍ."'
31ຢ່າຟັງເຮເຊກີຢາ, ເພາະວ່າກະສັດແຫ່ງອັດຊີເຣຍໄດ້ກ່າວວ່າ: 'ຈົ່ງຍອມຈຳນົນຕໍ່ຂ້າພະເຈົ້າ ແລະ ອອກມາຫາຂ້າພະເຈົ້າ.
ແລ້ວທ່ານແຕ່ລະຄົນຈະກິນຈາກເຄືອອະງຸ່ນຂອງຕົນ ແລະຈາກຕົ້ນຫມາກເດື່ອຂອງຕົນເອງ, ແລະຈະໄດ້ດື່ມນ້ຳຈາກບໍ່ເກັບນ້ຳຂອງຕົນ.
32ຈົນກ່ວາຂ້າພະເຈົ້າຈະມາພາທ່ານໄປທີ່ແຜ່ນດິນທີ່ຄ້າຍຄືກັບແຜ່ນດິນຂອງທ່ານເອງ, ເປັນແຜ່ນດິນທີ່ມີເຂົ້າ ແລະ ເຫລົ້າອະງຸ່ນໃຫມ່, ເປັນແຜ່ນ
ດິນທີ່ມີເຂົ້າຈີ່ ແລະ ພວກສວນອະງຸ່ນ, ແຜ່ນດິນທີ່ມີພວກຕົ້ນຫມາກກອກ ແລະ ນ້ຳເຜີ້ງ, ເພື່ອວ່າທ່ານທັງຫລາຍຈະມີຊີວິດຢູ່ ແລະ ບໍ່ຕາຍ.'
ຢ່າຟັງເຮເຊກີຢາເມື່ອທີ່ລາວຊັກຊວນທ່ານ, ໂດຍກ່າວວ່າ, 'ພຣະຢາເວຈະຊົງຊ່ວຍກູ້ພວກຂ້າພະເຈົ້າ.'
33ມີພະເຈົ້າອົງໃດຂອງປະຊາຊາດເຄີຍກູ້ແຜ່ນດິນຂອງຕົນໃຫ້ພົ້ນຈາກກຳມືຂອງກະສັດແຫ່ງອັດຊີເຣຍໄດ້ແດ່? 34ພະເຈົ້າຂອງເມືອງ ຮາມັດ ແລະ
ອັກປັດຢູ່ໃສ? ພະເຈົ້າຂອງເສຟາກວາອິມ, ເຮນາ, ແລະ ອີວານັ້ນຢູ່ໃສ? ພະເຫລົ່ານີ້ໄດ້ຊ່ວຍກູ້ຊາມາເຣຍຈາກມືຂອງຂ້າພະເຈົ້າໄດ້ບໍ?
35ພະເຈົ້າອົງໃດໃນບັນດາພະເຈົ້າທັງຫມົດຂອງປະເທດທັງຫລາຍ, ໄດ້ຊ່ວຍກູ້ປະເທດຂອງຕົນຈາກມືຂອງຂ້າພະເຈົ້າບໍ?
ພຣະຢາເວຈະຊ່ອຍກູ້ເຢຣູຊາເລັມຈາກມືຂອງຂ້າພະເຈົ້າໄດ້ບໍ?"
36ແຕ່ປະຊາຊົນໄດ້ແຕ່ມິດງຽບຢູ່ ແລະ ບໍ່ຕອບໂຕ້ແມ່ນແຕ່ຄຳດຽວ, ເພາະວ່າກະສັດໄດ້ມີຄຳສັ່ງວ່າ, "ຢ່າຕອບລາວ." 37ແລ້ວເອລີອາກິມ
ລູກຊາຍຂອງຮິນກີຢາ, ຜູ້ຮັບຜິດຊອບຣາຊວັງ; ແລະ ເຊັບນາ ເລຂາທິການ; ແລະ ໂຢອາ ລູກຊາຍຂອງອາຊັບ, ເລຂາ, ໄດ້
ເຂົ້າເຝົ້າເຮເຊກີຢາດ້ວຍເຄື່ອງນຸ່ງທີ່ຂາດ, ແລະ ໄດ້ກາບທູນພະອົງເຖິງຖ້ອຍຄຳຂອງຜູ້ບັນຊາການໃຫຍ່.


generated on Tue Jun 17 19:01:42 2025

19 1ສິ່ງນີ້ໄດ້ເກີດຂຶ້ນເມື່ອກະສັດເຮເຊກີຢາໄດ້ຟັງການລາຍງານຂອງພວກເຂົາ, ພະອົງກໍຊີກຈີກເສື້ອຜ້າຂອງພະອົງ. ໄດ້ເອົາຜ້າກະສອບ,
ມາປົກຄຸມພະອົງ, ແລະໄດ້ເຂົ້າໄປໃນພຣະວິຫານຂອງພຣະຢາເວ. 2ພະອົງຊົງໃຊ້ເອລີຢາກິມ, ຫົວໜ້າກົມມະວັງ, ແລະເຊັບນາຣາຊອົງຄະ
ລັກ, ແລະພວກປະໂລຫິດຜູ້ອາວຸໂສ, ປົກຄຸມຕົວດ້ວຍຜ້າກະສອບ, ໄດ້ໄປຫາຜູ້ປະກາດພຣະຄັມ. ເອຊາຢາລູກຊາຍຂອງອາໂມດ,

3ພວກເຂົາທັງຫລາຍໄດ້ກ່າວກັບພະອົງວ່າ, "ເຮເຊກີຢາໄດ້ກ່າວດັ່ງນີ້, 'ມື້ນີ້ເປັນມື້ແຫ່ງຄວາມທຸກໃຈ, ມື້ໄດ້ຖືກຕິຕຽນ, ແລະ ທົນທຸກ,
ເພາະວ່າເດັກກໍເຖິງກຳນົດເກີດ, ແຕ່ພວກເຂົາບໍ່ມີກຳລັງໃນການເກີດອອກມາ.
4ອາດຈະເປັນເພາະວ່າພຣະຢາເວພຣະເຈົ້າຂອງທ່ານຈະໄດ້ຍິນຖ້ອຍຄຳທັງໝົດ, ຂອງຜູ້ບັນຊາການໃຫຍ່ຜູ້ທີ່ກະສັດແຫ່ງອັດຊີເຣຍ ເຈົ້ານາຍ
ຂອງລາວໄດ້ສົ່ງມາເຢາະເຍີ້ຍພຣະເຈົ້າຜູ້ຊົງພຣະຊົນຢູ່, ແລະ ພຣະອົງຈະໄດ້ສັ່ງສອນພວກເຂົາດ້ວຍຖ້ອຍຄຳທີ່ພຣະຢາ
ເວພຣະເຈົ້າຂອງທ່ານໄດ້ຍິນ. ບັດນີ້ ຂໍໃຫ້ທ່ານອະທິຖານເພື່ອຄົນທີ່ຍັງຄົງເຫລືອຢູ່ທີ່ນີ້.'"
5ດັ່ງນັ້ນ ເມື່ອຜູ້ຮັບໃຊ້ຂອງກະສັດເຮເຊກີຢາໄດ້ມາເຖິງເອຊາຢາ, 6ແລະເອຊາຢາໄດ້ບອກພວກເຂົາທັງຫລາຍວ່າ, "ຈົ່ງບອກນາຍຂອງທ່ານ
ເຖິດວ່າ: 'ພຣະຢາເວໄດ້ກ່າວດັ່ງນີ້ວ່າ, "ຢ່າຢ້ານເພາະຖ້ອຍຄຳທີ່ທ່ານໄດ້ຍິນນັ້ນ, ເຊິ່ງຜູ້ຮັບໃຊ້ທັງ
ຫລາຍຂອງກະສັດແຫ່ງອັດຊີເຣຍໄດ້ຫມິ່ນປະຫມາດເຮົາ. 7ເບິ່ງເຖີດ, ເຮົາຈະໃສ່ວິນຍານຢ່າງຫນຶ່ງໃນລາວ, ເພື່ອວ່າລາວອາດຈະໄດ້ຍິນຂ່າວລື
ແລະ ກັບໄປທີ່ແຜ່ນດິນຂອງລາວ. ແລະ ເຮົາຈະເຮັດໃຫ້ລາວລົ້ມລົງດ້ວຍດາບໃນດິນແດນຂອງລາວເອງ."'
8ແລ້ວຜູ້ບັນຊາການໃຫຍ່ໄດ້ກັບໄປ ແລະ ໄດ້ພົບວ່າກະສັດແຫ່ງອັດຊີເຣຍກຳລັງຕໍ່ສູ້ກັບເມືອງລິບນາ, ເພາະວ່າລາວໄດ້ຍິນວ່າກະສັດໄດ້ສະເດັດ
ອອກຈາກລາກິດແລ້ວ. 9ແລ້ວເຊນນາເກຣິບຊົງໄດ້ຍິນວ່າ ຕີຣາກາກະສັດແຫ່ງເອທິໂອເປຍ ແລະ ປະເທດເອຢິບໄດ້ຍົກກອງ
ທັບອອກມາເພື່ອຕໍ່ສູ້ກັບພະອົງແລ້ວ, ດັ່ງນັ້ນ ພະອົງຈຶ່ງໄດ້ສົ່ງບັນດາຜູ້ສົ່ງຂ່າວໄປເຝົ້າເຮເຊກີຢາອີກເທື່ອຫນຶ່ງດ້ວຍຂໍ້ຄວາມວ່າ:
10"ທ່ານຈົ່ງເວົ້າກັບກະສັດເຮເຊກີຢາກະສັດແຫ່ງຢູດາດັ່ງນີ້ວ່າ, 'ຢ່າໃຫ້ພຣະເຈົ້າຂອງທ່ານເຊິ່ງຜູ້ທີ່ທ່ານໄວ້ວາງໃຈນັ້ນຫລອກລວງທ່ານ, ວ່າ,
"ເຢຣູຊາເລັມຈະບໍ່ຖືກມອບໄວ້ໃນກຳມືຂອງກະສັດແຫ່ງອັດຊີເຣຍ." 11ເບິ່ງເຖີດ, ທ່ານໄດ້ຍິນແລ້ວວ່າສິ່ງທີ່ບັນດາກະສັດແຫ່ງອັດຊີເຣຍໄດ້ຊົງເຮັດ
ກັບແຜ່ນດິນທັງຫມົດໂດຍການທຳລາຍລ້າງຈົນຫມົດສິ້ນ. ສະນັ້ນແລ້ວທ່ານເອງຈະລອດພົ້ນບໍ?
12ບັນດາພະເຈົ້າຂອງເຫລົ່າປະຊາຊາດເຊິ່ງບັນພະບຸຣຸດຂອງຂ້າພະເຈົ້າໄດ້ທຳລາຍຄື: ໂກຊານ, ຮາຣານ, ເຣເຊັບ,
ແລະປະຊາຊົນຂອງເອເດນທີ່ອາໄສຢູ່ໃນເຕລາສາໄດ້ຊ່ວຍພວກເຂົາໃຫ້ພົ້ນບໍ? 13ກະສັດຮາມັດ, ກະສັດແຫ່ງອາກປັດ, ກະສັດຂອງເມືອງເສຟາກ
ວາອິມ, ເມືອງເຮນາ, ແລະ ເມືອງອີວາຢູ່ໃສ? '"
14ເຮເຊກີຢາໄດ້ຊົງຮັບຈົດຫມາຍຈາກມືຂອງຜູ້ສົ່ງຂ່າວສານ ແລະ ຊົງໄດ້ອ່ານມັນ. ແລະໄດ້ຂຶ້ນໄປທີ່ພຣະວິຫານຂອງພຣະຢາເວ ແລະ
ເຮເຊກີຢາໄດ້ເປີດຈົດຫມາຍນັ້ນອອກສະເພາະພຣະພັກພຣະຢາເວ. 15ແລ້ວເຮເຊກີຢາໄດ້ຊົງອະທິຖານສະເພາະພຣະພັກພຣະຢາເວ ແລະ
ກ່າວວ່າ, “ຂ້າແດ່ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິສະຣາເອນ, ຜູ້ທີ່ປະທັບຢູ່ເທິງເຫລົ່າເຄຣູບ,
ພຣະອົງເປັນພຣະເຈົ້າອົງດຽວເຫນືອທຸກອານາຊອານາຈັກຂອງແຜ່ນດິນໂລກທັງຫມົດ. ພຣະອົງໄດ້ຊົງສ້າງສະຫວັນ ແລະ ແຜ່ນດິນໂລກ.
16ຂ້າແດ່ພຣະຢາເວ, ຂໍໄດ້ຊົງງ່ຽງຫູ, ແລະ ຊົງຟັງ, ຂ້າແດ່ພຣະຢາເວ, ຂໍຫລຽວເບິ່ງ, ແລະ ໄດ້ຊົງຟັງຖ້ອຍຄຳຂອງເຊັນນາເກຣິບ, ເຊິ່ງ
ເຂົາໄດ້ສົ່ງມາເພື່ອເຢາະເຍີ້ຍພຣະເຈົ້າຜູ້ຊົງພຣະຊົນຢູ່. 17ຂ້າແດ່, ພຣະຢາເວ. ເປັນຄວາມຈິງທີ່ກະສັດແຫ່ງອັດຊີເຣຍໄດ້ເຮັດໃຫ້ປະຊາຊາດ
ແລະ ແຜ່ນດິນຂອງພວກເຂົາຮ້າງເປົ່າ. 18ພວກເຂົາໂຍນພະເຈົ້າຂອງພວກເຂົາລົງໃສ່ໃນກອງໄຟ, ເພາະສິ່ງເຫລົ່ານັ້ນບໍ່ແມ່ນພະເຈົ້າ
ພຽງແຕ່ເປັນຜົນງານຂອງມືມະນຸດ, ແມ່ນໄມ້ ແລະ ຫີນ. ເພາະສະນັ້ນຊາວອັດຊີເຣຍຈຶ່ງທຳລາຍສິ່ງເຫລົ່ານັ້ນໄດ້.
19ສະນັ້ນບັດນີ້, ຂ້າແດ່ພຣະຢາເວ, ພຣະເຈົ້າຂອງຂ້ານ້ອຍທັງຫລາຍ, ຂໍຊົງຊ່ວຍພວກຂ້ານ້ອຍໃຫ້ພົ້ນຈາກອຳນາດຂອງເຂົາ, ເພື່ອວ່າຣາ
ຊອານາຈັກທັງຫມົດແຫ່ງແຜ່ນດິນໂລກຈະຮູ້ວ່າພຣະອົງຄື, ພຣະຢາເວ, ໄດ້ຊົງເປັນພຣະເຈົ້າພຽງແຕ່ອົງດຽວເທົ່ານັ້ນ.”
20ແລ້ວເອຊາຢາລູກຊາຍຂອງອາໂມດໄດ້ສົ່ງຂ່າວໄປຫາເຮເຊກີຢາ, ກ່າວວ່າ, "ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນໄດ້ກ່າວດັ່ງນີ້ວ່າ,
'ເພາະວ່າທ່ານໄດ້ອະທິຖານຫາເຮົາກ່ຽວກັບເຊັນນາເກຣິບກະສັດແຫ່ງອັດຊີເຣຍ, ເຮົາໄດ້ຍິນຄຳອະທິຖານຂອງທ່ານແລ້ວ.
21ສິ່ງນີ້ແມ່ນຖ້ອຍຄຳຂອງພຣະຢາເວທີ່ໄດ້ກ່າວເຖິງລາວ: "ລູກສາວພົມມະຈາຣີແຫ່ງຊີໂອນ ດູຖູກທ່ານ ແລະ ຫົວເຢາະເຍີ້ຍທ່ານ. ລູກສາວ
ແຫ່ງເຢຣູຊາເລັມສັ່ນຫົວຂອງນາງໃສ່ທ່ານ. 22ທ່ານໄດ້ເຢາະເຍີ້ຍ ແລະ ກ່າວຫຍາບຊ້າຕໍ່ຜູ້ໃດບໍ? ທ່ານໄດ້ຂຶ້ນສຽງຂອງທ່ານຕໍ່ຜູ້ໃດ ແລະ ໄດ້ເບິ່ງ
ຕາຂອງທ່ານດ້ວຍຄວາມຍິ່ງຈອງຫອງຕໍ່ຜູ້ໃດບໍ? ກໍຕໍ່ອົງບໍລິສຸດແຫ່ງອິສະຣາເອນນັ້ນແຫລະ!
23ດ້ວຍຜູ້ສື່ສານຂອງເຈົ້າ ໆ ໄດ້ເຢາະເຍີ້ຍອົງພຣະຜູ້ເປັນເຈົ້າ, ແລະ ເຈົ້າໄດ້ເວົ້າວ່າ, 'ດ້ວຍຣົດຮົບນ້ຳຫລວງຫລາຍຂອງເຈົ້າ,
ເຈົ້າໄດ້ຂຶ້ນໄປເຖິງບ່ອນສູງຂອງພູເຂົາຕ່າງໆ, ເຖິງບ່ອນໄກທີ່ສຸດຂອງເລບານອນ. ເຈົ້າຈະຕັດຕົ້ນແປກສີດາທີ່ສູງທີ່ສຸດຂອງມັນລົງ ທັງຕົ້ນ
ແປກສາມໃບທີ່ດີທີ່ສຸດຂອງມັນ. ເຈົ້າຈະໄປທີ່ພັກອາສັຍທີ່ໄກສຸດຂອງມັນ, ໃນປ່າທີ່ອຸດົມສົມບູນທີ່ສຸດຂອງມັນ. 24ເຈົ້າໄດ້ຂຸດຫນອງ ແລະ
ໄດ້ດື່ມນ້ຳໃນດິນແດນຕ່າງດ້າວ. ເຈົ້າໄດ້ເອົາຕີນເຈົ້າເຮັດໃຫ້ກະແສທັງຫມົດຂອງເອຢິບແຫ້ງແລ້ງໄປ.'
25ເຈົ້າບໍ່ໄດ້ຍິນບໍ່ວ່າ ເຮົາໄດ້ຕັດສິນໃຈໄວ້ມາດົນແລ້ວ, ແລະ ເຮົາໄດ້ວາງແຜນການໄວ້ແຕ່ດຶກດຳບັນຢ່າງໃດ? ດຽວນີ້
ເຮົາໄດ້ເຮັດໃຫ້ເປັນໄປໄດ້ແລ້ວ. ເຈົ້າຢູ່ທີ່ນີ້ເພື່ອທຳລາຍບັນດາເມືອງທີ່ເຂັ້ມແຂງທັກເພລົງໃຫ້ກາຍເປັນຊາກຫັກພັງ. 26ສ່ວນຊາວ
ເມືອງຜູ້ອາສັຍຢູ່ໃນເມືອງນັ້ນ, ກໍມີກຳລັງຫນ້ອຍ, ຕົກໃຈ ແລະ ອັບອາຍ. ພວກເຂົາປຽບເຫມືອນຕົ້ນໄມ້ທີ່ທົ່ງນາ, ແລະ ຄ້າຍຄືຫຍ້າສີຂຽວອ່ອນ,
ຄ້າຍຄືຫຍ້າເທິງຫລັງຄາເຮືອນ ຫລື ໃນທົ່ງນາ, ຖືກເຜົາໄຫມ້ກ່ອນທີ່ຈະງອກງາມ.
27ແຕ່ເຮົາໄດ້ຮູ້ຈັກການທີ່ເຈົ້ານັ່ງລົງ, ການທີ່ເຈົ້າອອກໄປ, ແລະ ການທີ່ເຈົ້າເຂົ້າມາ, ແລະຄວາມໂກດແຄ້ນຂອງເຈົ້າຕໍ່ເຮົາ.
28ເພາະຄວາມໂກດແຄ້ນຂອງເຈົ້າຕໍ່ເຮົາ, ແລະ ຄວາມຈອງຫອງຂອງເຈົ້າໄດ້ເຂົ້າມາໃນຫູຂອງເຮົາ, ສະນັ້ນເຮົາຈະໄດ້ເອົາຂໍ
ຂອງເຮົາເກາະໃສ່ດັງຂອງເຈົ້າ, ແລະ ຈະເອົາບັງຫຽນຂອງເຮົາໃສ່ປາກຂອງເຈົ້າ; ແລ້ວເຮົາຈະຫັນເຈົ້າກັບໄປຕາມທາງຈາກບ່ອນທີ່ເຈົ້າມານັ້ນ."
29ແລະນີ້ຈະເປັນຫມາຍສຳຄັນແກ່ເຈົ້າຄື: ໃນປີນີ້ເຈົ້າຈະກິນສິ່ງເກີດຂຶ້ນເອງ, ແລະໃນປີທີສອງສິ່ງທີ່ເຕີບໃຫຍ່ຕັ້ງແຕ່ຕົ້ນ.
ແລ້ວໃນປີທີສາມຈົ່ງຫວ່ານ ແລະ ເກັບກ່ຽວແລະ ເຮັດສວນອະງຸ່ນ, ແລະກິນຫມາກຂອງມັນ. 30ຄົນທີ່ເຫລືອຢູ່ໃນເຊື້ອສາຍ
ຂອງຢູດາຈະຢັ່ງຮາກລົງ ແລະ ເກີດຜົນຂຶ້ນອີກຄັ້ງ. 31ເພາະຄົນທີ່ເຫລືອຢູ່ຈະອອກຈາກນະຄອນ ເຢຣູຊາເລັມ, ແລະ
ຜູ້ທີ່ລອດຊີວິດຢູ່ຈະອອກມາຈາກພູເຂົາຊີໂອນ. ຄວາມກະຕືລືລົ້ນຂອງພຣະຢາເວຈອມໂຢທາຈະເຮັດສິ່ງນີ້.


generated on Tue Jun 17 19:01:42 2025

32ເພາະສະນັ້ນ ພຣະຢາເວໄດ້ກ່າວກ່ຽວກັບກະສັດແຫ່ງອັດຊີເຣຍດັ່ງນີ້ວ່າ: "ລາວຈະບໍ່ເຂົ້າໄປໃນເມືອງນີ້ ຫລື ຍິງລູກສອນມາບ່ອນນີ້.
ຫລືວ່າລາວຈະບໍ່ເຂົ້າມາກ່ອນດ້ວຍເຄື່ອງປ້ອງກັນ ຫລື ກໍ່ສ້າງຂັ້ນໄດບຸກຂຶ້ນມາ. 33ລາວເຂົ້າໄປທາງໃດ
ກໍຈະເປັນທາງດຽວກັນກັບທີ່ລາວຈະກັບໄປທາງນັ້ນ; ລາວຈະບໍ່ເຂົ້າໄປໃນເມືອງນີ້-ພຣະຢາເວໄດ້ກ່າວດັ່ງນີ້." 34ເພາະວ່າເຮົາຈະຊ່ວຍປ້ອງ
ກັນເມືອງນີ້ໄວ້ໃຫ້ລອດພົ້ນ, ເພື່ອເຫັນແກ່ປະໂຫຍດຂອງເຮົາເອງ ແລະ ເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ.'"
35ແລະຢູ່ມາໃນຄືນນັ້ນ ເທວະດາຂອງພຣະຢາເວໄດ້ອອກໄປ ແລະ ໄດ້ຂ້າທະຫານໃນຄ້າຍອັດຊີເຣຍ, ຈຳນວນ 185.000 ຄົນ. ແລະ
ເມື່ອຄົນຕື່ນຂຶ້ນໃນຕອນເຊົ້າ, ພວກເຂົາທຸກຄົນໄດ້ກາຍເປັນຊາກສົບໄປທົ່ວທຸກບ່ອນ.
36ດັ່ງນັ້ນເຊັນນາເກຣິບກະສັດແຫ່ງອັດຊີເຣຍໄດ້ຍົກທັບຂອງລາວອອກຈາກອິສະຣາເອນ ແລະ ໄດ້ຊີ່ງກັບໄປທີ່ວັງ ແລະ ໄດ້ຢູ່ໃນນະຄອນ ນີເນເວ.
37ຕໍ່ມາ, ເມື່ອພະອົງນະມັສະການຢູ່ໃນສາລາຂອງ ພະນີຊະຣົກ ພະຂອງພະອົງ, ອັດຣຳເມເລັກ ແລະ ຊາເຣເຊລູກຊາຍຂອງພະອົງກໍໄດ້ຂ້າພະ
ອົງດ້ວຍດາບ. ແລ້ວພວກເຂົາທັງສອງກໍໄດ້ຫນີໄປທີ່ແຜ່ນດິນ ອາຣາຣັດ. ແລ້ວເອສາຮັດໂດນລູກຊາຍຂອງພະອົງກໍໄດ້ຊີ່ງຂຶ້ນເປັນກະສັດແທນ.


generated on Tue Jun 17 19:01:42 2025

20 [1]ໃນເວລານັ້ນເຮເຊກີຢາໄດ້ປ່ວຍໃກ້ຈະຕາຍ. ດັ່ງນັ້ນ ຜູ້ທຳນວາຍເອຊາຢາຜູ້ເປັນລູກຊາຍຂອງອາໂມດ, ໄດ້ມາເຂົ້າເຝົ້າພະອົງ,
ແລະໄດ້ກ່າວກັບພະອົງວ່າ, "ພຣະຢາເວກ່າວດັ່ງນີ້ວ່າ: 'ຈົ່ງຈັດການບ້ານເມືອງຂອງທ່ານໃຫ້ຮຽບຮ້ອຍ; ເພາະວ່າທ່ານຈະຕາຍ, ແລະ
ຈະບໍ່ມີຊີວິດຢູ່.'"[2]ແລ້ວເຮເຊກີຢາໄດ້ຫັນຫນ້າເຂົ້າໄປຫາຝາ ແລະ ອະທິຖານຕໍ່ພຣະຢາເວ, ວ່າ,[3]ຂ້າແດ່ພຣະຢາເວ, ກະຣຸນາຣະລຶກວ່າ,
ຂ້ານ້ອຍໄດ້ດຳເນີນຢູ່ສະເພາະພຣະພັກຂອງພຣະອົງດ້ວຍຄວາມຊື່ສັດ ແລະ ດ້ວຍສຸດຫົວໃຈຂອງຂ້ານ້ອຍ, ແລະ ໄດ້ເຮັດໃນສິ່ງທີ່ດີໃນສາຍພ
ຣະເນດຂອງພຣະອົງ." ແລ້ວເຮເຊກີຢາໄດ້ຮ້ອງໄຫ້ສຽງດັງ.

[4]ກ່ອນທີ່ເອຊາຢາຈະອອກໄປຮອດໃຈກາງເດີ່ນ, ຖ້ອຍຄຳຂອງພຣະຢາເວໄດ້ມາເຖິງທ່ານ, ວ່າ,[5]"ຈົ່ງກັບໄປ, ບອກເຮເຊກີຢາ,
ຜູ້ນຳຂອງປະຊາຊົນຂອງເຮົາວ່າ, 'ນີ້ແມ່ນສິ່ງທີ່ພຣະຢາເວ, ພຣະເຈົ້າຂອງດາວິດບັນພະບຸຣຸດຂອງເຈົ້າ, ກ່າວ:
"ເຮົາໄດ້ຍິນຄຳອະທິຖານຂອງເຈົ້າແລ້ວ, ເຮົາໄດ້ເຫັນນ້ຳຕາຂອງເຈົ້າແລ້ວ. ເຮົາຈະຮັກສາເຈົ້າໃນມື້ທີສາມ, ແລະເຈົ້າຈະຂຶ້ນໄປທີ່ພຣະວິ
ຫານຂອງພຣະຢາເວ.
[6]ເຮົາຈະເພີ່ມຊີວິດຂອງເຈົ້າອີກສິບຫ້າປີ, ເຮົາຈະຊ່ອຍກູ້ເຈົ້າແລະ ເມືອງນີ້ໃຫ້ພົ້ນຈາກກຳມືຂອງກະສັດແຫ່ງອັດຊີເຣຍ, ແລະ
ເຮົາຈະປົກປ້ອງເມືອງນີ້ໄວ້ເພື່ອເຫັນແກ່ເຮົາເອງ. ແລະ ເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ."'[7]ດັ່ງນັ້ນ ເອຊາຢາໄດ້ບອກວ່າ,
"ຈົ່ງເອົາເຂົ້າຫນົມຫມາກເດື່ອມາອັນຫນຶ່ງ." ພວກເຂົາກໍເອົາມາວາງໄວ້ເທິງພະຍາດຂອງພະອົງນັ້ນ, ແລະພະອົງກໍຫາຍດີເປັນປົກກະຕິ.
[8]ເຮເຊກີຢາໄດ້ກ່າວກັບເອຊາຢາວ່າ, "ອັນໃດຈະເປັນຫມາຍສຳຄັນທີ່ສະແດງວ່າພຣະຢາເວຈະຊົງປິ່ນປົວຂ້າພະເຈົ້າ, ແລະ
ສິ່ງນັ້ນສະແດງໃຫ້ເຫັນວ່າຂ້າພະເຈົ້າຈະໄດ້ຂຶ້ນໄປພຣະວິຫານຂອງພຣະຢາເວໃນມື້ທີສາມ?"[9]ເອຊາຢາໄດ້ກ່າວວ່າ, "ນີ້ເປັນຫມາຍສຳ
ຄັນສຳລັບພະອົງຈາກພຣະຢາເວ, ທີ່ພຣະຢາເວຈະໄດ້ຊົງເຮັດຕາມທີ່ພຣະອົງໄດ້ກ່າວໄວ້. ຄືຈະໃຫ້ເງົາຕາເວັນກ້າວໄປທາງຫນ້າສິບຂັ້ນ, ຫລື
ຈະໃຫ້ຢ້ອນກັບມາສິບຂັ້ນ?"
[10]ເຮເຊກີຢາໄດ້ຕອບວ່າ, "ມັນເປັນສິ່ງງ່າຍທີ່ຈະໃຫ້ເງົາຍ້າຍອອກໄປສິບຂັ້ນ. ຢ່າເລີຍ, ຂໍໃຫ້ເງົາຢ້ອນກັບຄືນມາສິບຂັ້ນເຖີດ."[11]ດັ່ງນັ້ນ ຜູ້ທຳນ
ວາຍເອຊາຢາໄດ້ຮ້ອງທູນຕໍ່ພຣະຢາເວ, ແລະພຣະອົງໄດ້ຊົງນຳເອົາເງົາຢ້ອນກັບຄືນມາສິບຂັ້ນ, ຈາກບ່ອນທີ່ມັນຢ້ອນກັບຄືນຂຶ້ນ
ໄປເທິງຂັ້ນໄດຂອງອາຮາດ.
[12]ໃນເວລານັ້ນ ເມໂຣດັກບາລາດານ ລູກຊາຍຂອງບາລາດານກະສັດແຫ່ງບາບີໂລນ ໄດ້ຊົງສົ່ງຈົດຫມາຍ ແລະ ຂອງຂວັນມາໃຫ້ແກ່ເຮເຊກີຢາ,
ເພາະພະອົງຊົງໄດ້ຍິນວ່າເຮເຊກີຢາຊົງເຈັບປ່ວຍ.[13]ເຮເຊກີຢາໄດ້ຊົງຟັງຈົດຫມາຍເຫລົ່ານັ້ນ, ແລະຊົງໄດ້ພາ
ພວກຜູ້ສົ່ງຂ່າວໄປເບິ່ງຄັງຊັບສົມບັດທັງຫມົດຂອງພະອົງ, ເພື່ອໃຫ້ເບິ່ງເງິນ, ທອງຄຳ, ເຄື່ອງເທດ ແລະ ນ້ຳມັນຢ່າງດີ, ແລະ ຄັງອາວຸດຂອງພະ
ອົງ, ແລະໃຫ້ເບິ່ງທຸກຢ່າງທີ່ມີຢູ່ໃນຄັງຂອງພະອົງ. ບໍ່ມີສິ່ງໃດຢູ່ໃນພະຣາຊະວັງ, ຫລື ໃນຣາຊະອານາຈັກທັງຫມົດຂອງພະອົງ,
ເຊິ່ງເຮເຊກີຢາບໍ່ໄດ້ເປີດເຜີຍແກ່ພວກພະອົງ.
[14]ຈາກນັ້ນເອຊາຢາຜູ້ທຳນວາຍກໍໄດ້ເຂົ້າເຝົ້າກະສັດເຮເຊກີຢາ ແລະ ທູນຖາມພະອົງວ່າ, "ຄົນເຫລົ່ານີ້ທູນຫຍັງແດ່? ແລະພວກເຂົາມາຫາພະ
ອົງຈາກໃສແດ່?" ເຮເຊກີຢາກ່າວວ່າ, "ພວກເຂົາມາຈາກເມືອງໄກຄືມາຈາກປະເທດບາບີໂລນ."[15]ເອຊາຢາໄດ້ຖາມວ່າ,
"ພວກເຂົາໄດ້ເຫັນຫຍັງຢູ່ໃນພະຣາຊະວັງຂອງພະອົງແດ່?" ເຮເຊກີຢາຕອບວ່າ, "ພວກເຂົາໄດ້ເຫັນທຸກຢ່າງຢູ່ໃນວັງຂອງຂ້າພະເຈົ້າ. ບໍ່ມີສິ່ງ
ມີຄ່າຫຍັງໃນພະຄັງຂອງຂ້າພະເຈົ້າທີ່ຂ້າພະເຈົ້າບໍ່ໄດ້ເປີດເຜີຍແກ່ພວກເຂົາ."
[16]ດັ່ງນັ້ນ ເອຊາຢາໄດ້ກ່າວກັບເຮເຊກີຢາວ່າ, "ຈົ່ງຟັງຖ້ອຍຄຳຂອງພຣະຢາເວ:[17]"ຈົ່ງເບິ່ງ, ວັນເວລາກຳລັງຈະມາເຖິງເມື່ອທຸກສິ່ງໃນວັງຂອງທ່ານ,
ແລະ ສິ່ງຂອງທີ່ບັນພະບຸຣຸດຂອງທ່ານໄດ້ສະສົມມາຈົນເຖິງທຸກມື້ນີ້, ຈະຕ້ອງຖືກເອົາໄປທີ່ບາບີໂລນ. ແລະ ບໍ່ມີສິ່ງໃດເຫລືອເລີຍ, ພຣະຢາ
ເວກ່າວດັ່ງນີ້ແຫລະ.[18]ລູກບາງຄົນເຊິ່ງຖືກຳເນີດມາຈາກທ່ານ, ຜູ້ເຊິ່ງເກີດມາກັບທ່ານ-ຄົນເຫລົ່ານັ້ນຈະນຳເອົາໂຕພວກເຂົາໄປ, ແລະ
ພວກເຂົາຈະໄປເປັນຂັນທີໃນພະຣາຊະວັງຂອງກະສັດແຫ່ງບາບີໂລນ.'"
[19]ຫລັງຈາກນັ້ນເຮເຊກີຢາໄດ້ກ່າວກັບເອຊາຢາວ່າ, "ຖ້ອຍຄຳຂອງພຣະຢາເວທີ່ທ່ານໄດ້ກ່າວມານັ້ນເປັນສິ່ງທີ່ດີແລ້ວ." ເພາະວ່າພ
ຣະອົງຊົງໄດ້ຄິດວ່າ, "ກໍດີແລ້ວບໍ່ແມ່ນບໍ ໃນເມື່ອມີຄວາມສະຫງົບສຸກ ແລະ ຄວາມປອດພັຍໃນສມັຍຂອງຂ້າພະເຈົ້າ?"[20]ສ່ວນພະຣາຊ
ະກິດອື່ນໆຂອງເຮເຊກີຢາ ແລະ ອຳນາດທັງຫມົດຂອງພະອົງ, ແລະການທີ່ພະອົງໄດ້ສ້າງສະ ແລະ ຮ່ອງລະບາຍນ້ຳ, ແລະວິທີທີ່ພະອົງໄດ້
ນຳເອົານ້ຳເຂົ້າມາໃນເມືອງ-ໄດ້ແນວໃດ ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານກະສັດແຫ່ງຢູດາບໍ່ແມ່ນບໍ?[21]ເຮເຊກີຢາໄດ້ຊົງລ່ວງລັບໄປ
ຢູ່ກັບບັນພະບຸຣຸດຂອງພະອົງ, ແລະມານາເຊລູກຊາຍຂອງພະອົງໄດ້ຊົງຂຶ້ນເປັນກະສັດແທນ.


generated on Tue Jun 17 19:01:42 2025

21 [1]ມານາເຊມີອາຍຸໄດ້ສິບສອງປີເມື່ອໄດ້ຊຶ່ງຄອງຣາຊ; ພະອົງໄດ້ຊຶ່ງປົກຄອງຫ້າສິບ-ຫ້າປີໃນນະຄອນ ເຢຣູຊາເລັມ. ແມ່ຂອງພະອົງມີ
ນາມຊື່ວ່າ ເຮັບຊີບາ.[2]ພະອົງໄດ້ຊຶ່ງເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ, ຕາມການກະທຳທີ່ຫນ້າກຽດຊັງຂອງປະ
ຊາຊາດທັງຫລາຍ ເຊິ່ງພຣະຢາເວໄດ້ຊຶ່ງຂັບໄລ່ອອກໄປໃຫ້ພົ້ນຫນ້າປະຊາຊາດອິສະຣາເອນ.[3]ພຣະອົງໄດ້ຊຶ່ງສ້າງສະຖານສູງ
ເຊິ່ງເຮເຊກີຢາພໍ່ຂອງພະອົງໄດ້ຊຶ່ງທຳລາຍນັ້ນ, ແລະ ພະອົງຊຶ່ງໄດ້ຕັ້ງແທ່ນບູຊາຕ່າງໆແດ່ພະບາອານ, ແລະຊຶ່ງໄດ້ສ້າງຕັ້ງເສົາພະອາເຊຣາຂຶ້ນ
ໃຫມ່, ຄືກັນກັບອາຮາບກະສັດແຫ່ງອິສະຣາເອນໄດ້ຊຶ່ງເຮັດ, ແລະ ໄດ້ຊຶ່ງກົ້ມກາບດວງດາວທຸກດວງຂອງທ້ອງຟ້າ ແລະ ບູຊາສິ່ງເຫລົ່ານັ້ນ.

[4]ມານາເຊໄດ້ຊຶ່ງສ້າງແທ່ນບູຊາຂອງພະຕ່າງຊາດໃນພຣະວິຫານຂອງພຣະຢາເວ, ເຖິງວ່າພຣະຢາເວໄດ້ກ່າວວ່າ,
"ເຮົາຈະໃສ່ຊື່ຂອງເຮົາໄວ້ໃນນະຄອນເຢຣູຊາເລັມຕະຫລອດໄປ."[5]ພະອົງໄດ້ສ້າງແທ່ນບູຊາຕ່າງໆແດ່ດວງດາວຕ່າງໆທັງຫມົດຂອງທ້ອງຟ້າທັງ
ໃນລານທັງສອງຂ້າງຂອງພຣະວິຫານຂອງພຣະຢາເວ.[6]ພະອົງໄດ້ຊຶ່ງນຳເອົາລູກຊາຍໄປເຜົາໄຟ; ແລະໄດ້ຊຶ່ງຖືເລີກຍາມເພື່ອເຮັດເວດມົນຄາຖາ
ແລະຊຶ່ງໄດ້ຕິດຕໍ່ກັບຄົນທີ່ຕາຍໄປແລ້ວ ແລະຄົນທີ່ເວົ້າກັບຜີວິນຍານຕ່າງໆໄດ້. ພະອົງໄດ້ຊຶ່ງເຮັດສິ່ງທີ່ຊົ່ວຮ້າຍຫລວງຫລາຍໃນສາຍພຣະ
ເນດພຣະຢາເວ ຍຸແຍ່ໃຫ້ພຣະເຈົ້າຊຶ່ງໃຈຮ້າຍ.
[7]ສ່ວນຮູບແກະສະຫລັກຂອງອາເຊຣາທີ່ພະອົງໄດ້ຊຶ່ງສ້າງນັ້ນ, ພະອົງໄດ້ຊຶ່ງຕັ້ງໄວ້ໃນພຣະະວິຫານ. ເຊິ່ງພຣະວິ
ຫານນີ້ພຣະຢາເວໄດ້ກ່າວກັບດາວິດ ແລະ ຊາໂລໂມນລູກຊາຍຂອງພະອົງວ່າ; “ໃນວິຫານນີ້ ແລະ ໃນນະຄອນເຢຣູຊາເລັມ,
ເຊິ່ງເຮົາໄດ້ເລືອກອອກຈາກຊົນເຜົ່າທັງຫມົດຂອງອິສະຣາເອນ, ທີ່ເຮົາຈະໃສ່ຊື່ຂອງເຮົາໄວ້ຕະຫລອດໄປ.[8]ເຮົາຈະບໍ່ເປັນ
ເຫດໃຫ້ຕີນຂອງອິສະຣາເອນພະເນຈອນອອກຈາກແຜ່ນດິນທີ່ເຮົາໄດ້ມອບໃຫ້ກັບບັນພະບຸຣຸດຂອງພວກເຂົາອີກ,
ຖ້າພຽງແຕ່ພວກເຂົາລະມັດຣະວັງທີ່ຈະປະຕິບັດຕາມທຸກສິ່ງທີ່ເຮົາໄດ້ສັ່ງພວກເຂົາ, ແລະປະຕິບັດຕາມທັມ
ບັນຍັດທຸກຢ່າງທີ່ໂມເຊຜູ້ຮັບໃຊ້ຂອງເຮົາໄດ້ສັ່ງພວກເຂົາ.”[9]ແຕ່ປະຊາຊົນບໍ່ຍອມຟັງ, ແລະ ມານາເຊໄດ້ຊຶ່ງນຳພວກເຂົາໃຫ້
ຫລົງໄປໃນທາງທີ່ຊົ່ວຮ້າຍກວ່າບັນດາປະຊາຊາດ ເຊິ່ງພຣະຢາເວໄດ້ຊຶ່ງທຳລາຍໃຫ້ພົ້ນຫນ້າປະຊາຊົນອິສະຣາເອນ.
[10]ດັ່ງນັ້ນ ພຣະຢາເວໄດ້ກ່າວກັບພວກຜູ້ທຳນວາຍຜູ້ຮັບໃຊ້, ຂອງພຣະອົງ, ວ່າ,[11]"ເພາະວ່າມານາເຊກະສັດ
ແຫ່ງຢູດາໄດ້ເຮັດສິ່ງທີ່ຫນ້າກຽດຊັງເຫລົ່ານີ້, ແລະການເຮັດສິ່ງທີ່ຊົ່ວຮ້າຍກວ່າຄົນອະໂມຣິດຜູ້ທີ່ຢູ່ມາກ່ອນລາວໄດ້ເຮັດທັງຫມົດ, ອີກ
ທັງຍັງເຮັດໃຫ້ຢູດາເຮັດບາບກັບບັນດາຮູບເຄົາຣົບຂອງລາວ,[12]ເພາະສະນັ້ນ ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ກ່າວດັ່ງນີ້ວ່າ: ເບິ່ງເຖີດ,
ເຮົາກຳລັງນຳເຫດຮ້າຍມາເຫນືອນະຄອນ ເຢຣູຊາເລັມ ແລະ ຢູດາທີ່ໃຜກໍຕາມທີ່ໄດ້ຍິນແລ້ວ, ຫູທັງສອງຂ້າງຂອງລາວຈະອື້ໄປ.
[13]ເຮົາຈະວັດແທກນະຄອນເຢຣູຊາເລັມໂດຍໃຊ້ເຊືອກເສັ້ນດຽວກັບທີ່ເຮົາໄດ້ວັດແທກໃນເມືອງຊາມາເຣຍ, ແລະໄດ້ໃຊ້ລູກດິ່ງອັນດຽວກັນກັບ
ທີ່ວັດແທກເຊື້ອສາຍອາຮາບ, ເຮົາຈະລ້າງນະຄອນເຢຣູຊາເລັມໃຫ້ສະອາດຄືກັບຄົນລ້າງຈານ, ຄືລ້າງແລ້ວກໍຂວ້ຳລົງ.
[14]ເຮົາຈະຖິ້ມມໍຣະດົກສ່ວນທີ່ເຫລືອຂອງເຮົາໄປ ແລະມອບພວກເຂົາໃຫ້ຢູ່ໃນກຳມືສັດຕຣູຂອງພວກເຂົາ. ແລະພວກເຂົາຈະຕົກເປັນເຫຍື່ອ ແລະ
ເປັນເຄື່ອງປຸ້ນຂອງສັດຕຣູທັງຫມົດຂອງພວກເຂົາ,[15]ເພາະວ່າພວກເຂົາໄດ້ເຮັດຄວາມຊົ່ວຮ້າຍໃນສາຍຕາຂອງເຮົາ, ແລະ
ກະຕຸ້ນເຮົາໃຫ້ໃຈຮ້າຍ, ນັບແຕ່ມື້ທີ່ບັນພະບຸຣຸດຂອງພວກເຂົາອອກຈາກປະເທດເອຢິບ, ຈົນເຖິງທຸກມື້ນີ້."
[16]ຍິ່ງໄປກວ່ານັ້ນອີກ, ມານາເຊໄດ້ເຮັດໃຫ້ເລືອດຂອງຜູ້ບໍຣິສຸດໄຫລອອກເປັນຈຳນວນຫລາຍ, ຈົນພະອົງເຮັດໃຫ້ຄວາມຕາຍເຕັມນະ
ຄອນເຢຣູຊາເລັມຈາກດ້ານຫນຶ່ງໄປອີກດ້ານຫນຶ່ງ. ນອກເຫນືອຈາກບາບທີ່ໄດ້ເຮັດໃຫ້ຢູດາເຮັດຜິດ,
ເມື່ອພວກເຂົາໄດ້ເຮັດຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ.[17]ສ່ວນພະຣາຊກິດອື່ນໆຂອງມານາເຊ, ແລະ ທຸກສິ່ງທີ່ຊຶ່ງໄດ້ເຮັດ, ແລະ
ບາບທີ່ພະອົງໄດ້ເຮັດ, ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານກະສັດແຫ່ງຢູດາບໍ່ແມ່ນບໍ?[18]ມານາເຊໄດ້ຊຶ່ງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງ
ແລະ ໄດ້ຊຶ່ງຖືກຝັງໄວ້ໃນສວນຂອງພະຣາຊະວັງຂອງພະອົງເອງ, ໃນສວນອຸດສາ. ອາໂມນລູກຊາຍຂອງພະອົງໄດ້ຊຶ່ງຂຶ້ນເປັນກະສັດແທນ.
[19]ອາໂມນມີອາຍຸໄດ້ຊາວສອງປີເມື່ອພະອົງໄດ້ຊຶ່ງຄອງຣາຊ; ພະອົງໄດ້ປົກຄອງຢູ່ທີ່ນະຄອນເຢຣູຊາເລັມເປັນເວລາສອງປີ. ແມ່ຂອງພະອົງມີນາ
ມຊື່ວ່າ ເມຊຸນເລເມດ; ນາງເປັນລູກສາວຂອງຮາຣຸດຊາວຢົດບາ.[20]ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ,
ຄືກັບມານາເຊພໍ່ຂອງພະອົງໄດ້ຊຶ່ງເຮັດ.
[21]ອາໂມນໄດ້ຊຶ່ງດຳເນີນໃນທາງທຸກຢ່າງທີ່ພໍ່ຂອງພະອົງໄດ້ຊຶ່ງດຳເນີນ, ແລະ ໄດ້ບູຊາຮູບປັ້ນທີ່ພໍ່ຂອງພະອົງໄດ້ຊຶ່ງບູຊາ, ແລະ ກົ້ມຂາບຮູບເຄົາ
ຣົບເຫລົ່ານັ້ນ.[22]ພະອົງໄດ້ປະຖິ້ມພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພະອົງ, ແລະ ບໍ່ໄດ້ຊຶ່ງດຳເນີນໄປໃນເສັ້ນທາງຂອງພຣະຢາເວ.
[23]ຜູ້ຮັບໃຊ້ຂອງອາໂມນໄດ້ຮ່ວມກັນຄິດການກະບົດ ແລະ ໄດ້ຂ້າກະສັດໃນພະຣາຊວັງຂອງພະອົງເອງ.
[24]ແຕ່ປະຊາຊົນໃນແຜ່ນດິນໄດ້ຂ້າທຸກຄົນທີ່ສົມຮູ້ຮ່ວມຄິດກັນກະບົດຕໍ່ກະສັດອາໂມນ, ແລ້ວປະຊາຊົນໃນແຜ່ນດິນໄດ້ຕັ້ງໂຢຊີ
ຢາລູກຊາຍຂອງພະອົງຂຶ້ນເປັນກະສັດແທນ.[25]ສ່ວນພະຣາຊກິດອື່ນໆ ຂອງອາໂມນທີ່ໄດ້ຊຶ່ງເຮັດມາແລ້ວ, ໄດ້ບັນທຶກໄວ້ໃນຫນັງສືພົງສາວະ
ດານຂອງກະສັດແຫ່ງຢູດາບໍ່ແມ່ນບໍ?[26]ປະຊາຊົນໄດ້ຝັງພະອົງໃນອຸບໂມງຝັງສົບຂອງພະອົງໃນສວນອຸດຊາ, ແລະ ໂຢຊີຢາລູກຊາຍຂອງພະ
ອົງໄດ້ຊຶ່ງຂຶ້ນເປັນກະສັດແທນ.

22 [1]ໂຢຊີຢາຊົງມີອາຍຸໄດ້ແປດປີເມື່ອພະອົງຄອງຣາຊ; ພະອົງໄດ້ປົກຄອງສາມສິບ-ເອັດປີໃນນະຄອນເຢຣູຊາເລັມ. ແມ່ຂອງພະອົງມີນາມຊື່ວ່າ
ເຢດີດາ (ນາງເປັນລູກສາວຂອງອາດາຢາ ແລະ ເປັນຊາວເມືອງໂບຊະກາດ).[2]ພະອົງໄດ້ເຮັດສິ່ງທີ່ຊອບທັມໃນສາຍພະເນດຂອງພຣະຢາເວ.
ພະອົງໄດ້ຊົງດຳເນີນຕາມທາງຫມົດຂອງດາວິດບັນພະບຸຣຸດຂອງພະອົງ, ແລະ ພະອົງບໍ່ໄດ້ຊົງຫັນເຫໄປທາງຂວາ ຫລື ທາງຊ້າຍ.

[3]ສິ່ງນີ້ໄດ້ເກີດຂຶ້ນໃນປີທີສິບແປດແຫ່ງການປົກຄອງຂອງກະສັດໂຢຊີຢາ, ພະອົງໄດ້ຊົງໃຊ້ຊາຟານລູກຊາຍຂອງອາຊາລີຢາລູກຊາຍຂອງເມຊຸນ
ລຳ, ອົງຄະລັກໄປທີ່ພຣະວິຫານຂອງພຣະຢາເວ, ໂດຍກ່າວວ່າ,[4]"ຈົ່ງຂຶ້ນໄປຫາຮິນກີຢາມະຫາປະໂລຫິດ ແລະ
ບອກທ່ານໃຫ້ນັບເງິນທີ່ຖືກນຳເຂົ້າມາໃນພຣະວິຫານຂອງພຣະຢາເວ, ເຊິ່ງເຈົ້າຫນ້າທີ່ທີ່ເກັບຈາກປະຊາຊົນ.[5]ຂໍໃຫ້ມອບໄວ້ໃນມືຂອງຜູ້ເຮັດຫນ້າ
ທີ່ຮັກສາພຣວິຫານຂອງພຣະຢາເວ, ແລະ ໃຫ້ພວກເຂົາຈ່າຍຄ່າແຮງງານຜູ້ທີ່ຢູ່ໃນພຣະວິຫານຂອງພຣະຢາເວເພື່ອສ້ອມແປງພຣະວິຫານສຳ
ລັບພວກເຂົາ.
[6]ຂໍໃຫ້ພວກເຂົາເອົາເງິນໃຫ້ແກ່ຊ່າງໄມ້, ຊ່າງກໍ່ສ້າງ, ແລະ ຊ່າງປູນ, ແລະຍັງຈະຊື້ໄມ້ ແລະ
ກ້ອນຫີນເພື່ອສ້ອມແປງພຣະວິຫານເຊັ່ນດຽວກັນ."[7]ແຕ່ບໍ່ຈຳເປັນຕ້ອງຂໍເອົາບັນຊີຈາກເງິນທີ່ມອບໄວ້ໃນມືຂອງພວກເຂົາ,
ເພາະວ່າພວກເຂົາໄດ້ເຮັດຢ່າງຊື່ສັດ.
[8]ຮິນກີຢາມະຫາປະໂລຫິດໄດ້ເວົ້າກັບຊາຟານອົງຄະລັກວ່າ, "ຂ້າພະເຈົ້າໄດ້ເຫັນຫນັງສືກົດບັນຍັດໃນພຣະວິຫານຂອງພຣະຢາເວ." ດັ່ງນັ້ນ
ຮິນກີຢາໄດ້ມອບຫນັງສືນັ້ນໃຫ້ຊາຟານ, ແລະ ລາວກໍໄດ້ອ່ານ.[9]ຊາຟານໄດ້ຈາກໄປ ແລະ ໄດ້ເອົາຫນັງສືໄປຖວາຍກະສັດ, ແລະ
ໄດ້ລາຍງານກັບພະອົງ, ວ່າ, “ຜູ້ຮັບໃຊ້ຂອງພະອົງໄດ້ຈ່າຍເງິນທີ່ພົບໃນພຣະວິຫານ ແລະ ພວກເຂົາໄດ້ນຳເງິນເຂົ້າໄປມອບໄວ້ໃນກຳມືຂອງຄົນງ
ານຜູ້ທີ່ເຮັດຫນ້າທີ່ເບິ່ງແຍງພຣະວິຫານຂອງພຣະຢາເວ."[10]ແລ້ວຊາຟານອົງຄະລັກໄດ້ກ່າວຕໍ່ກະສັດວ່າ, "ຮິນກີຢາມະຫາປະໂລຫິດໄດ້ມອບ
ຫນັງສືແກ່ຂ້າພະອົງຫນຶ່ງເຫລັ້ມ." ແລ້ວຊາຟານກໍໄດ້ອ່ານຖວາຍກະສັດ.
[11]ສິ່ງນີ້ໄດ້ເກີດຂຶ້ນເມື່ອກະສັດໄດ້ຊົງຟັງຖ້ອຍຄຳຂອງຫນັງສືກົດບັນຍັດ, ແລະ ພະອົງກໍໄດ້ຊົງຈີກເສື້ອຜ້າຂອງພະອົງ.[12]ກະສັດໄດ້
ຊົງສັ່ງໃຫ້ປະໂລຫິດຮິນກີຢາ, ແລະອາຮີກຳລູກຊາຍຂອງຊາຟານ, ແລະ ອັກໂບລູກຊາຍຂອງມີກາອີຢາ ແລະ ຊາຟານ, ທີ່ເປັນອົງຄະລັກ ແລະ
ອາສາອີຢາອົງຄະລັກພະອົງເອງ, ກ່າວວ່າ,[13]"ຈົ່ງໄປທູນຖາມພຣະຢາເວເພື່ອຂ້າພະເຈົ້າ, ແລະ ເພື່ອປະຊາຊົນ ແລະ ເພື່ອຢູດາທັງຫມົດ,
ກ່ຽວກັບຖ້ອຍຄຳສັບຕ່າງໆໃນຫນັງສືນີ້ທີ່ພົບເຫັນ.
ເພາະວ່າຄວາມຄຽດແຄ້ນຂອງພຣະຢາເວເຊິ່ງກຳລັງລຸກຂຶ້ນຕໍ່ສູ້ພວກເຮົາແມ່ນໃຫຍ່ຫລວງຫລາຍ
ເພາະວ່າບັນພະບຸຣຸດຂອງພວກເຮົາບໍ່ໄດ້ເຊື່ອຟັງຖ້ອຍຄຳຂອງຫນັງສືນີ້ ທີ່ຈະເຮັດທຸກສິ່ງຕາມທີ່ຂຽນໄວ້ກ່ຽວກັບພວກເຮົາ."
[14]ດັ່ງນັ້ນ ຮິນກີຢາປະໂລຫິດ, ອາຮີກຳ, ອັກໂບ, ຊາຟານ, ແລະ ອາສາອີຢາຈຶ່ງໄດ້ໄປຫາຮຸນດາຜູ້ປະກາດພຣະຄັມ, ຍິງຜູ້ເປັນເມຍຂອງຊານ
ລູມລູກຊາຍຂອງຕິກວາລູກຊາຍຂອງຮາຮັດ, ຜູ້ເບິ່ງແຍງເສື້ອຜ້າ (ນາງໄດ້ຢູ່ໃນນະຄອນ ເຢຣູຊາເລັມໃນພາກພື້ນທີສອງ), ແລະພວກເຂົາໄດ້ສົນ
ທະນາກັນກັບນາງ.[15]ນາງໄດ້ບອກພວກເຂົາວ່າ, "ນີ້ແຫລະແມ່ນສິ່ງທີ່ພຣະຢາເວພຣະເຈົ້າແຫ່ງອິສະຣາເອນ, ໄດ້ກ່າວວ່າ: 'ຈົ່ງບອກຜູ້ທີ່ໃຊ້ພວກ
ທ່ານມາຫາເຮົາວ່າ,[16]“ນີ້ແຫລະຄືສິ່ງທີ່ພຣະຢາເວໄດ້ກ່າວ: ນີ້ແຫລະ ເຮົາຈະ ນຳເອົາເຫດຮ້າຍມາສູ່ສະຖານທີ່ແຫ່ງນີ້ ແລະ
ມາຫາປະຊາຊົນຂອງເມືອງນີ້, ຕາມຖ້ອຍຄຳທັງຫມົດໃນຫນັງສືທີ່ກະສັດຢູດາໄດ້ອ່ານນັ້ນ.
[17]ເພາະວ່າພວກເຂົາໄດ້ປະຖິ້ມເຮົາແລະ ໄດ້ເຜົາເຄື່ອງຫອມຖວາຍພະເຈົ້າອົງອື່ນໆ, ເຊິ່ງເຮັດໃຫ້ເຮົາໃຈຮ້າຍກັບທຸກໆການກະທຳທັງ
ຫມົດທີ່ພວກເຂົາໄດ້ເຮັດ—ດັ່ງນັ້ນ ຄວາມໃຈຮ້າຍຂອງເຮົາຈະສະຫວ່າງໄປສູ່ສະຖານທີ່ແຫ່ງນີ້, ແລະ
ຈະບໍ່ສາມາດດັບໄດ້.'"[18]ແຕ່ກະສັດແຫ່ງຢູດາ, ຜູ້ທີ່ຊົງໃຊ້ພວກທ່ານມາຖາມຄວາມປະສົງຂອງພຣະຢາເວນັ້ນ, ຈົ່ງໄປບອກພະອົງວ່າ:
"ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນກ່າວໄວ້ວ່າ: 'ທຸກຖ້ອຍຄຳທີ່ເຈົ້າໄດ້ຍິນ,[19]ເພາະວ່າຫົວໃຈຂອງເຈົ້າອ່ອນນ້ອມ, ແລະ
ເຈົ້າຖ່ອມຕົວລົງຕໍ່ພຣະພັກພຣະຢາເວ, ເມື່ອເຈົ້າໄດ້ຍິນຖ້ອຍຄຳເຊິ່ງເຮົາກ່າວໂທດສະຖານທີ່ນີ້ ແລະ ປະຊາຊົນໃນເມືອງນີ້, ເຊິ່ງຈະກາຍເປັນທີ່
ເປົ່າຮ້າງ ແລະ ຖືກສາບແຊ່ງ, ແລະ ເຈົ້າໄດ້ຈີກເຄື່ອງນຸ່ງຂອງເຈົ້າ ແລະ ຮ້ອງໄຫ້ຕໍ່ຫນ້າເຮົາ, ເຮົາເອງກໍໄດ້ຍິນທ່ານເຊັ່ນກັນ-
ພຣະຢາເວກ່າວດັ່ງນີ້ແຫລະ.
[20]ຈົ່ງເບິ່ງເຖີດ, ເຮົາຈະນຳພາເຈົ້າໄປໄວ້ກັບບັນພະບຸຣຸດທັງຫລາຍຂອງເຈົ້າ, ແລະ ເຈົ້າຈະຖືກນຳພາໄປບ່ອນອຸບ
ໂມງຝັງສົບຂອງເຈົ້າດ້ວຍຄວາມສະຫງົບສຸກ. ດວງຕາຂອງເຈົ້າຈະບໍ່ເຫັນຄວາມໂຊກຮ້າຍທັງຫມົດທີ່ເຮົານຳມາສູ່ສະຖານທີ່ນີ້.'"'" "ດັ່ງນັ້ນ
ພວກຜູ້ຊາຍທັງຫລາຍກໍໄດ້ນຳເອົາຂ່າວສານນີ້ກັບມາທູນກະສັດ.

23 [1]ດັ່ງນັ້ນ ກະສັດໄດ້ຊົງໃຊ້ຜູ້ສື່ງຂ່າວສານຜູ້ທີ່ຮວບຮວມອາວຸດທັງຫມົດຂອງຢູດາ ແລະ ຂອງນະຄອນເຢຣູຊາເລັມໃຫ້ມາເຂົ້າເຝົ້າພະອົງ.
[2]ຈາກນັ້ນກະສັດໄດ້ສະເດັດຂຶ້ນໄປທີ່ພຣະວິຫານຂອງພຣະຢາເວ, ແລະພ້ອມດ້ວຍປະຊາຊົນຢູດາທັງຫມົດ ແລະ ຊາວນະ
ຄອນເຢຣູຊາເລັມທັງຫມົດທີ່ຢູ່ກັບພະອົງ, ລວມທັງພວກປະໂລຫິດ, ພວກປະກາດພຣະຄັມ, ແລະ ປະຊາຊົນທັງຫມົດ, ບໍ່ວ່າຈະເປັນຜູ້ເລັກ
ນ້ອຍຫລືຜູ້ໃຫຍ່. ແລ້ວພະອົງໄດ້ທ່ອງອ່ານຖ້ອຍຄຳທັງຫມົດໃນຫນັງສືພັນທະສັນຍາ ທີ່ເຫັນຢູ່ໃນພຣະວິຫານຂອງພຣະຢາເວໃຫ້ພວກເຂົາຟັງ.

[3]ກະສັດໄດ້ຢືນຢູ່ຂ້າງເສົາ ແລະ ໄດ້ຊົງເຮັດພັນທະສັນຍາຕໍ່ພຣະພັກພຣະຢາເວ, ວ່າຈະດຳເນີນຕາມພຣະຢາເວ ແລະ ຈະຮັກສາພຣະບັນຍັດ,
ຄຳສອນ, ແລະ ກົດຂອງພຣະອົງ, ດ້ວຍສຸດຈິດສຸດໃຈຂອງພະອົງ, ຈະຢືນຢັນຖ້ອຍຄຳຂອງພັນທະສັນຍານີ້ທີ່ຂຽນໄວ້ໃນຫນັງສືນີ້. ດັ່ງນັ້ນ
ປະຊາຊົນທັງຫມົດກໍໄດ້ເຂົ້າຮ່ວມໃນພັນທະສັນຍານັ້ນ.
[4]ກະສັດໄດ້ສັ່ງໃຫ້ຮິນກີຢາປະໂລຫິດໃຫຍ່, ແລະ ພວກປະໂລຫິດທີ່ຮອງລົງມາ, ແລະ ຜູ້ເຝົ້າປະຕູໃຫ້ນຳເຄື່ອງໃຊ້ທັງ
ຫມົດທີ່ເຮັດຂຶ້ນສຳລັບພະບາອານ ສຳລັບພະອາເຊຣາ ແລະ ສຳລັບດວງດາວຂອງທ້ອງຟ້າທັງຫມົດ. ທີ່ອອກມາຈາກພ
ຣະວິຫານຂອງພຣະຢາເວ, ພະອົງກໍໄດ້ເຜົາຜານໄປຢູ່ນອກນະຄອນເຢຣູຊາເລັມໃນເຂດທົ່ງນາແຫ່ງຮ່ອມພູເຂົາກິດໂຣນ ແລະ
ໄດ້ຊົງເອົາຂີ້ເຖົ່າຂອງມັນໄປທີ່ເມືອງເບັດເອນ.[5]ພະອົງໄດ້ຊົງກຳຈັດພວກນັກບວດຂອງຮູບເຄົາຣົບ ຜູ້ທີ່ບັນ
ດາກະສັດແຫ່ງຢູດາໄດ້ແຕ່ງຕັ້ງໃຫ້ເຜົາເຄື່ອງຫອມຢູ່ສະຖານສູງ ໃນເມືອງຕ່າງໆຂອງຢູດາ ແລະ ທົ່ວໆນະຄອນເຢຣູຊາເລັມ-ລວມທັງຄົນເຫລົ່າ
ນັ້ນທີ່ຈູດເຄື່ອງຫອມຖວາຍພະບາອານ, ຖວາຍດວງອາທິດ, ດວງຈັນ, ດາວເຄາະ, ແລະ ຫມູ່ດາວທັງຫມົດຂອງທ້ອງຟ້າ.
[6]ພະອົງໄດ້ຊົງນຳເອົາພະອາເຊຣາອອກຈາກພຣະວິຫານຂອງພຣະຢາເວ, ໄປທີ່ຮ່ອມພູກິດໂຣນ ພາຍນອກນະຄອນ ເຢຣູຊາເລັມ ແລະ
ໄດ້ຊົງເຜົາທີ່ນັ້ນ. ພະອົງໄດ້ຊົງທຸບໃຫ້ເປັນຂີ້ຝຸ່ນ ແລະ ໂຍນຜົງຂີ້ຝຸ່ນນັ້ນລົງໃນຂຸມຝັງສົບຂອງຄົນທົ່ວໄປ.[7]ພະອົງໄດ້ຊົງມ້າງທີ່ຢູ່ອາ
ສັຍຂອງຍິງໂສເພນີໃນພິທີທາງສາສະນາ ເຊິ່ງຢູ່ໃນພຣະວິຫານຂອງພຣະຢາເວ, ທີ່ຜູ້ຍິງໄດ້ຫຍິບເສື້ອຜ້າສຳລັບພະອາເຊຣາ.
[8]ໂຢຊີຢາໄດ້ຊົງໃຫ້ນັກບວດທັງຫມົດອອກຈາກເມືອງຕ່າງໆຂອງຢູດາ ແລະ ໄດ້ຊົງເຮັດໃຫ້ສະຖານທີ່ສູງຄືບ່ອນທີ່ນັກບວດໄດ້ຈູດເຄື່ອງຫອມເສຍ
ຄວາມສັກສິດ, ຕັ້ງແຕ່ເມືອງເກບາເຖິງເບເອນເຊບາ. ແລະ ພະອົງໄດ້ທຳລາຍສະຖານທີ່ສູງຂອງປະຕູເຊິ່ງຢູ່ທາງເຂົ້າປະຕູຂອງໂຢຊວຍ
(ເຈົ້າເມືອງ), ທີ່ຢູ່ເບື້ອງຊ້າຍມືທີ່ປະຕູເມືອງ.[9]ເຖິງແມ່ນວ່າບັນດານັກບວດທຸກແຫ່ງ
ສະຖານສູງບໍ່ໄດ້ຮັບອະນຸຍາດໃຫ້ປະຕິບັດຫນ້າທີ່ຢູ່ທີ່ແທ່ນບູຊາຂອງພຣະຢາເວໃນນະຄອນ ເຢຣູຊາເລັມ, ແຕ່ພວກເຂົາທັງຫລາຍ
ໄດ້ກິນເຂົ້າຈີ່ບໍ່ມີເຊື້ອ ໃນບັນດາພວກອ້າຍນ້ອງຂອງພວກເຂົາເອງ.
[10]ໂຢຊີຢາໄດ້ຊົງເຮັດໃຫ້ໂຕເຟັດ, ໃນຮ່ອມພູຮິນໂນມເປັນມົນທິນ, ເພື່ອວ່າຈະບໍ່ມີຜູ້ໃດເຜົາລູກຊາຍ ຫລື ລູກສາວຂອງຕົນໃຫ້ເປັນເຄື່ອງບູຊາຕໍ່
ພະໂມເລັກ.[11]ພະອົງໄດ້ ຊົງກຳຈັດພວກມ້າທີ່ບັນດາກະສັດແຫ່ງຢູດາໄດ້ຖວາຍແກ່ດວງຕາເວັນ. ທີ່ຢູ່ໃນບໍຣິເວນທາງເຂົ້າພຣະວິ
ຫານຂອງພຣະຢາເວ, ໃກ້ກັບຫ້ອງນາທານເມເລັກ, ຂ້າຣາຊະການຄົນຫນຶ່ງ. ໂຢຊີຢາໄດ້ຊົງຈູດຣົດມ້າຂອງດວງອາທິດ.
[12]ກະສັດໂຢຊີຢາໄດ້ທຳລາຍແທ່ນບູຊາເທິງຫລັງຄາຫ້ອງຊັ້ນເທິງຂອງອາຮາດ, ເຊິ່ງບັນດາກະສັດຂອງຢູດາໄດ້ສ້າງຂຶ້ນ, ແລະ
ແທ່ນບູຊາທີ່ມານາເຊໄດ້ສ້າງຂຶ້ນໃນເດີ່ນທັງສອງຂອງພຣະວິຫານຂອງພຣະຢາເວ, ໂຢຊີຢາໄດ້ຊົງທຸບມ້າງສິ່ງເຫລົ່ານັ້ນເປັນປ່ຽງໆ ແລະ
ໂຍນມັນຖິ້ມໄປໃນຮ່ອມພູກິດໂຣນ.[13]ກະສັດໄດ້ທຳລາຍສະຖານທີ່ສູງເຊິ່ງທີ່ຢູ່ທາງທິດຕາເວັນອອກຂອງນະຄອນເຢຣູຊາເລັມ, ແລະ
ຢູ່ທາງທິດໃຕ້ຂອງພູເຂົາແຫ່ງການຊົ່ວຊ້ານັ້ນເສຍຄວາມບໍຣິສຸດ ທີ່ຊາໂລໂມນກະສັດແຫ່ງອິສະຣາເອນໄດ້ສ້າງໄວ້ສຳລັບພະອັດສະຕາກ,
ເປັນຮູບບູຊາສິ່ງທີ່ຫນ້າລັງກຽດຂອງຊາວຊີໂດນ; ແລະ ສຳລັບພະເຄໂມດ, ເປັນຮູບເຄົາຣົບສິ່ງທີ່ຫນ້າລັງກຽດຂອງຊາວໂມອາບ; ແລະ
ສຳລັບພະມິນກົມ, ເປັນຮູບເຄົາຣົບທີ່ຫນ້າລັງກຽດຂອງຊາວອຳໂມນ.[14]ພະອົງໄດ້ທຸບເສົາທີ່ສັກສິດອອກເປັນປ່ຽງໆ ແລະ ໂຄ່ນບັນ
ດາເສົາທັງຂອງອາເຊຣາລົງແລ້ວກໍເອົາບັນດາກະດູກຂອງມະນຸດຖິ້ມໃສ່ທີ່ນັ້ນ.
[15]ໂຢຊີຢາໄດ້ທຳລາຍແທ່ນບູຊາທີ່ເບັດເອນກັບສະຖານທີ່ສູງເຊິ່ງໄດ້ຊົງຕັ້ງຂຶ້ນໂດຍເຢໂຣໂບອາມລູກຊາຍຂອງເນບັດ (ຜູ້ໄດ້
ນຳອິສະຣາເອນໃຫ້ເຮັດບາບ) ພະອົງໄດ້ຊົງເຜົາແທ່ນບູຊາກັບສະຖານທີ່ສູງນັ້ນລົງ. ແລະໄດ້ເຜົາສະຖານທີ່ສູງນັ້ນແລ້ວບົດໃຫ້ເປັນຝຸ່ນ. ພະ
ອົງຍັງໄດ້ເຜົາເສົາອາເຊຣາດ້ວຍ.[16]ໃນຂະນະທີ່ໂຢຊີຢາໄດ້ສັງເກດໄປອ້ອມໆບໍລິເວນນັ້ນ, ພະອົງໄດ້ສັງເກດເຫັນຫລຸມຝັງສົບທີ່ຢູ່ຂ້າງພູເຂົາ. ພະ
ອົງໄດ້ສົ່ງຄົນໃຫ້ໄປເອົາບັນດາກະດູກອອກຈາກຫລຸມຝັງສົບ; ແລະ ພະອົງໄດ້ເຜົາເທິງແທ່ນບູຊາ, ເພື່ອເຮັດໃຫ້ຄວາມສັກສິດເສຍຫາຍ.
ຕາມຖ້ອຍຄຳຂອງອົງພຣະຢາເວເຊິ່ງຄົນຂອງພຣະເຈົ້າໄດ້ກ່າວໄວ້, ຄົນທີ່ເຄີຍກ່າວເຖິງສິ່ງເຫລົ່ານີ້ໄວ້ກ່ອນແລ້ວ.
[17]ແລ້ວພະອົງກ່າວວ່າ, "ນັ້ນແມ່ນອູບໂມງຝັງສົບຂອງໃຜທີ່ເຮົາຫລຽວເຫັນ?" ພວກຄົນໃນເມືອງນັ້ນກໍໄດ້ເວົ້າກັບພະອົງວ່າ,
"ເປັນບ່ອນຝັງສົບຂອງປະຊາຊົນຂອງພຣະເຈົ້າ ຜູ້ທີ່ມາຈາກຢູດາ ແລະ ເວົ້າເຖິງສິ່ງເຫລົ່ານີ້ ເຊິ່ງພະອົງຫາກໍໄດ້ຊົງເຮັດແທ່ນບູຊາທີ່ເບັດເອນ
.”[18]ດັ່ງນັ້ນ ໂຢຊີຢາໄດ້ກ່າວວ່າ, "ໃຫ້ລາວຢູ່ທີ່ນັ້ນເຖີດ. ຢ່າປ່ອຍໃຫ້ຜູ້ໃດຍ້າຍກະດູກຂອງລາວໄປ.” ພວກເຂົາທັງຫລາຍຈຶ່ງປະກະດູກຂອງລາວ
ໄວ້ຢ່າງນັ້ນ, ພ້ອມກັບກະດູກຂອງຜູ້ປະກາດພຣະຄັມ ຜູ້ອອກມາຈາກເມືອງຊາມາເຣຍ.
[19]ແລ້ວໂຢຊີຢາໄດ້ຊົງຍ້າຍບັນດາສາລາທັງຫມົດຂອງສະຖານສູງທີ່ຢູ່ໃນເມືອງຕ່າງໆຂອງຊາມາເຣຍ,
ຊຶ່ງບັນດາກະສັດແຫ່ງອິສະຣາເອນໄດ້ຊົງສ້າງໄວ້, ແລະເປັນການເຮັດໃຫ້ພຣະຢາເວໂກດຮ້າຍ.
ພະອົງໄດ້ຊົງເຮັດຕໍ່ສິ່ງເຫລົ່ານັ້ນເຫມືອນທຸກຢ່າງທີ່ໄດ້ຊົງເຮັດທີ່ເບັດເອນ[20]ພະອົງໄດ້ຂ້ານັກບວດແຫ່ງສະຖານສູງທັງຫມົດເທິງແທ່ນບູຊາ
ແລະໄດ້ຊົງເຜົາກະດູກຄົນເທິງແທ່ນເຫລົ່ານັ້ນ ແລ້ວພະອົງກໍໄດ້ກັບຄືນໄປກຸງເຢຣູຊາເລັມ.
[21]ຈາກນັ້ນກະສັດໄດ້ອອກ ຄຳ ສັ່ງໃຫ້ປະຊາຊົນ, ທັງຫມົດ ວ່າ“ ຈົ່ງຖືເທສະການປັສະຄາຖວາຍແດ່ ພຣະຢາເວພຣະເຈົ້າ, ຂອງພວກເຈົ້າ.
ດັ່ງທີ່ມີຂຽນໄວ້ໃນປຶ້ມບັນທຶກຂອງພັນທະສັນຍານີ້.”[22]ເພາະວ່າການສະຫລອງເທສະການປັສະຄາເຊັ່ນນີ້ບໍ່ໄດ້ຖືກັນມາຕັ້ງແຕ່ສມັຍຂອງຜູ້ພິພາກສາທີ່ໄດ້ປົກຄອງອິສ
ບໍ່ເຄີຍມີໃນສມັຍ ບັນດາກະສັດແຫ່ງອິສະຣາເອນ, ແລະກະສັດແຫ່ງຢູດາ.[23]ແຕ່ໃນປີທີສິບແປດແຫ່ງການປົກຄອງຂອງກະສັດໂຢຊີຢາ
ມີການສະຫລອງເທສະການ ປັສະຄາຂອງພຣະຢາເວ ຢ່າງນີ້ໃນກຸງເຢຣູຊາເລັມ.
[24]ໂຢຊີຢາ ຍັງໄດ້ລົບລ້າງຜູ້ທີ່ເວົ້າລົມກັບຄົນຕາຍ, ຫລືຜີ. ລາວຍັງໄດ້ຊົງກຳຈັດ ບັນດາເຄື່ອງລາງ, ຮູບປັ້ນເຄົາຣົບ,
ແລະສິ່ງຫນ້າກຽດຫນ້າຊັງທັງຫມົດ ຊຶ່ງເຫັນກັນຢູ່ໃນແຜ່ນດິນຢູດາແລະເຢຣູຊາເລັມ, ເພື່ອຊົງຢັ້ງຢືນ ຖ້ອຍຄຳ
ຂອງກົດບັນຍັດເຊິ່ງມີຂຽນໄວ້ໃນປຶ້ມທີ່ປະໂລຫິດ ຮິນກີຢາ ໄດ້ເຫັນໃນພຣະວິຫານຂອງພຣະຢາເວ.[25]ກ່ອນໂຢຊີຢາ,

ກໍບໍ່ມີກະສັດອົງໃດຄືກັບລາວ. ຜູ້ໄດ້ຫັນກັບມາຫາພຣະຢາເວ ດ້ວຍສຸດຈິດ, ສຸດໃຈ, ແລະ ດ້ວຍສຸດກຳລັງຂອງລາວ,
ຜູ້ທີ່ໄດ້ເຮັດຕາມກົດບັນຍັດທັງຫມົດ ຂອງໂມເຊ, ຫລັງຈາກໂຢຊີຢາກໍບໍ່ມີກະສັດອົງໃດຂຶ້ນມາຄືພະອົງ.
26 ເຖິງຢ່າງໃດກໍຕາມ, ພຣະຢາເວ ກໍບໍ່ໄດ້ຫັນຈາກຄວາມໂກດຮ້າຍອັນແຮງກ້າຂອງພຣະອົງ,. ເຊິ່ງໄດ້ລຸກຂຶ້ນຕໍ່ຢູດາ
ຍ້ອນການນະມັສະການພະຂອງຄົນຕ່າງຊາດທີ່ມານາເຊໄດ້ເຮັດໃຫ້ພຣະອົງໂກດຮ້າຍ. 27 ດັ່ງນັ້ນພຣະຢາເວໄດ້ກ່າວວ່າ,
"ເຮົາຈະເຮັດໃຫ້ຢູດາອອກໄປໃຫ້ພົ້ນສາຍຕາຂອງເຮົາດ້ວຍ, ຄືກັບທີ່ເຮົາໄດ້ເຮັດກັບອິສະຣາເອນ
ແລະເຮົາຈະຂັບໄລ່ເມືອງນີ້ທີ່ເຮົາໄດ້ເລືອກອອກໄປເສຍ, ຄືກຸງເຢຣູຊາເລັມ, ແລະພຣະວິຫານ ເຊິ່ງເຮົາໄດ້ເວົ້າວ່າ 'ນາມຂອງເຮົາຈະຢູ່ທີ່ນັ້ນ.'"
28 ສ່ວນພະຣາຊກິດ ອື່ນໆຂອງໂຢຊີຢາ, ແລະທຸກສິ່ງທີ່ໄດ້ຊົງກະທຳ, ໄດ້ບັນທຶກໄວ້ໃນປຶ້ມປະຫວັດສາດຂອງກະສັດຢູດາບໍ່ແມ່ນບໍ? 29 ໃນສມັຍ,
ຂອງພະອົງຟາຣາໂອ ເນໂກ, ກະສັດຂອງປະເທດເອຢິບ, ໄດ້ຍົກທັບສູ້ກັບກະສັດອັດຊີເຣຍຢູ່ທີ່ແມ່ນ້ຳເອິຟຣັດ, ກະສັດ ໂຢຊີຢາໄດ້ໄປພົບກັບ
ເນໂກ ໃນຢູ່ສະຫນາມຮົບ, ແລະ ເນໂກໄດ້ຂ້າພະອົງໃນ ເມືອງເມກິດໂດ. 30 ພວກຂ້າຣາຊການຂອງໂຢຊີຢາໄດ້ ນຳ
ສົບໃສ່ຣົດມ້າເສິກຈາກເມກິດໂດ, ເອົາໄປຍັງກຸງເຢຣູຊາເລັມ, ແລະໄດ້ຝັງພະອົງໄວ້ໃນບ່ອນຝັງສົບຂອງພະອົງເອງ.
ແລະປະຊາຊົນໃນແຜ່ນດິນນັ້ນໄດ້ ນຳ ເອົາເຢໂຮອາຮາດລູກຊາຍຂອງ ໂຢຊີຢາ, ມາແລະຊົງແຕ່ງຕັ້ງລາວ,
ແລະໄດ້ແຕ່ງຕັ້ງໃຫ້ເປັນກະສັດແທນພໍ່ຂອງຕົນ.
31 ເຢໂຮອາຮາດ ມີອາຍຸໄດ້ຊາວສາມປີໃນເວລາທີ່ລາວໄດ້ຂຶ້ນຄອງຣາຊ, ແລະລາວໄດ້ຊົງປົກຄອງໃນກຸງເຢຣູຊາເລັມ. ໄດ້ສາມເດືອນ.
ແມ່ຂອງລາວຊື່ວ່າ ຮາມູຕານ, ນາງເປັນລູກສາວຂອງເຢເຣມີຢາ ຊາວລີບນາ. 32 ເຢໂຮອາຮາດໄດ້ເຮັດຄວາມຊົ່ວຮ້າຍໃນສາຍຕາຂອງພຣະຢາເວ,
ຕາມທຸກສິ່ງທີ່ບັນພະບຸຣຸດຂອງພະອົງໄດ້ກະທຳ. 33 ຟາຣາໂອ ເນໂກໄດ້ຈັບພະອົງຂັງໄວ້ທີ່ ຣິບລາ ໃນເມືອງ ຮາມັດ,.
ເພື່ອບໍ່ໃຫ້ພະອົງປົກຄອງຢູ່ໃນເມືອງເຢຣູຊາເລັມ, ແລ້ວ ເນໂກໄດ້ປັບຢູດາດ້ວຍເງິນຫນຶ່ງຮ້ອຍຕະລັນ. ແລະທອງ ຄຳຫນຶ່ງຕະລັນ
34 ຟາຣາໂອເນໂກໄດ້ແຕ່ງຕັ້ງ ເອລີອາກິມ ລູກຊາຍຂອງ ໂຢຊີຢາ ໃຫ້ເປັນກະສັດແທນໂຢຊີຢາບິດາຂອງພະອົງ, ແລະໄດ້ປ່ຽນຊື່ເປັນ
ເຢໂຮຍອາກິມ. ແຕ່ພະອົງໄດ້ຊົງພາ ເຢໂຮອາຮາດໄປປະເທດອີຢິບ, ແລະ ເຢໂຮອາຮາດໄດ້ຕາຍຢູ່ທີ່ນັ້ນ. 35 ເຢໂຮຍອາກິມ ໄດ້ຈ່າຍເງິນແລະ ຄຳ
ໃຫ້ຟາຣາໂອ. ຕາມ ຄຳ ສັ່ງຂອງຟາຣາໂອ, ເຢໂຮຍອາກິມໄດ້ ເກັບພາສີທີ່ດິນ ແລະບັງຄັບປະຊາຊົນ
ແຕ່ລະຄົນຂອງແຜ່ນດິນໃຫ້ເງິນແລະທອງຄຳມາຖວາຍໃຫ້ພະອົງ ຕາມການປະເມີນຂອງພວກເຂົາ.
36 ເຢໂຮຍອາກິມໄດ້ຊົງ ມີອາຍຸຊາວຫ້າປີ. ໃນເວລາທີ່ພະອົງໄດ້ຂຶ້ນຄອງບັນລັງ, ແລະພະອົງໄດ້ປົກຄອງຢູ່ໃນກຸງເຢຣູຊາເລັມ. ສິບເອັດປີ
ແມ່ຂອງພະອົງຊື່ວ່າ ເຊບີດາ, ນາງເປັນລູກສາວຂອງ ເປດາອີຢາ ຈາກເມືອງ ຣູມາ. 37 ເຢໂຮຍອາກິມ
ໄດ້ເຮັດຄວາມຊົ່ວຮ້າຍໃນສາຍຕາຂອງພຣະຢາເວ, ຕາມທຸກສິ່ງທີ່ບັນພະບຸຣຸດຂອງພະອົງໄດ້ຊົງກະທຳ.


generated on Tue Jun 17 19:01:42 2025

24 1ໃນລະຫວ່າງການປົກຄອງຂອງກະສັດເຢໂຮຢາກິມ, ເນບູກາດເນັດຊາ ກະສັດແຫ່ງບາບີໂລນໄດ້ໂຈມຕີຢູດາ;
ເຢໂຮຍອາກິມໄດ້ກາຍເປັນຜູ້ຮັບໃຊ້ຂອງພະອົງ ເປັນເວລາສາມປີ. ຈາກນັ້ນ ເຢໂຮຍອາກິມກໍ ໄດ້ກັບເປັນກະບົດຕໍ່ເນບູກາດເນັດຊາ.
2ພຣະຢາເວໄດ້ຊົງໃຊ້ຊາວເຄເດຍ, ຊາວອາຣາມ, ຊາວໂມອາບ, ແລະຊາວອຳໂມນ, ມາຕໍ່ສູ້ກັບເຢໂຮຍອາກິມ.
ພຣະອົງໄດ້ຊົງໃຊ້ພວກເຂົາທັງຫລາຍໄປຕໍ່ສູ້ຢູດາ ເພື່ອຈະທຳລາຍເສຍ. ສິ່ງເຫລົ່ານີ້ໄດ້ເກີດຂຶ້ນຕາມຖ້ອຍຄຳຂອງພຣະຢາເວ
ທີ່ໄດ້ກ່າວຜ່ານທາງບັນດາຜູ້ທຳນວາຍ, ຜູ້ຮັບໃຊ້ຂອງພຣະອົງ.

3ແທ້ຈິງແລ້ວສິ່ງນີ້ໄດ້ເກີດຂຶ້ນກັບຢູດາ, ຕາມຄຳເວົ້າຂອງພຣະຢາເວ ເພື່ອຈະໃຫ້ພວກເຂົາອອກໄປໃຫ້ພົ້ນຈາກສາຍຕາຂອງພຣະອົງ,
ເພາະບາບທັງຫລາຍຂອງມານາເຊ, ທຸກຢ່າງທີ່ພຣະອົງໄດ້ຊົງກະທຳ, 4ແລະສະເພາະເລືອດທີ່ບໍ່ມີຄວາມຜິດ,
ຊຶ່ງພະອົງໄດ້ເຮັດໃຫ້ໄຫລອອກນັ້ນດ້ວຍ ເພາະພະອົງໄດ້ເຮັດໃຫ້ເມືອງເຢຣູຊາເລັມເຕັມໄປດ້ວຍເລືອດທີ່ບໍ່ມີຄວາມຜິດ.
ພຣະຢາເວບໍ່ຊົງປະສົງທີ່ຈະໃຫ້ອະພັຍ.
5ສ່ວນພະຣາຊກິດອື່ນໆ ຂອງເຢໂຮຍອາກິມ, ແລະທຸກສິ່ງທີ່ພະອົງໄດ້ກະທຳ, ບັນທຶກໄວ້ໃນປຶ້ມປະຫວັດສາດຂອງກະສັດຢູດາບໍ່ແມ່ນບໍ?
6ເຢໂຮຍອາກິມໄດ້ຊົງລ່ວງລັບໄປຢູ່ກັບບັນພະບຸຣຸດ, ແລະ ເຢໂຮຢາກິນລູກຊາຍຂອງພະອົງ ໄດ້ຂຶ້ນເປັນກະສັດແທນ.
7ກະສັດແຫ່ງເອຢິບບໍ່ໄດ້ຊົງຍົກທັບມາໂຈມຕີຈາກແຜ່ນດິນຂອງພະອົງອີກຕໍ່ໄປ. ເພາະວ່າກະສັດແຫ່ງບາບີໂລນໄດ້ຢຶດເອົາດິນແດນທັງຫມົດ
ຊຶ່ງຄວບຄຸມໂດຍກະສັດຂອງປະເທດເອຢິບຕັ້ງແຕ່ຈາກແຄມຝັ່ງເອຢິບໄປຫາແມ່ນ້ຳ ເອິຟຣັດ.
8ເຢໂຮຍອາກິນ ມີອາຍຸໄດ້ສິບແປດປີເມື່ອລາວໄດ້ຄອງຣາຊ; ພະອົງໄດ້ປົກຄອງຢູ່ກຸງເຢຣູຊາເລັມສາມເດືອນ. ແມ່ຂອງພະອົງຊື່ວ່າ ເນຣູຊະຕາ.
ນາງເປັນລູກສາວຂອງເອນນາທານ, ຄົນໃນເມືອງເຢຣູຊາເລັມ. 9ລາວໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງພຣະຢາເວ.
ພະອົງໄດ້ເຮັດທຸກສິ່ງທີ່ບິດາຂອງພະອົງໄດ້ກະທຳ.
10ໃນເວລານັ້ນກອງທັບກອງທັບຂອງເນບຸດກາເນັດຊາກະສັດແຫ່ງບາບີໂລນ ໄດ້ຍົກທັບຂຶ້ນມາໂຈມຕີກຸງເຢລູຊາແລັມ ແລະໄດ້ລ້ອມກຸງໄວ້.
11ເນບູກາດເນັດຊາ ກະສັດແຫ່ງບາບີໂລນ ໄດ້ມາທີ່ເມືອງນັ້ນ ຂະນະທີ່ພວກທະຫານຂອງພະອົງຍັງລ້ອມເມືອງນັ້ນຢູ່, 12ແລະເຢໂຮຍອາກິມ
ກະສັດແຫ່ງຢູດາ ໄດ້ຊົງອອກໄປຫາກະສັດແຫ່ງບາບີໂລນ, ທັງຕົວພະອົງ, ພ້ອມກັບແມ່, ພວກນາຍທະຫານ, ພວກເຈົ້າເມືອງ,
ແລະພວກຂ້າຣາຊການປະຈຳວັງຂອງພະອົງ. ກະສັດແຫ່ງບາບີໂລນໄດ້ຈັບພະອົງເປັນຊະເລີຍໃນປີທີແປດແຫ່ງການຄອງຣາຊຂອງພະອົງ.
13ເນບູກາດເນັດຊາ ໄດ້ຊົງຂົນເອົາສິ່ງທີ່ມີຄ່າໃນພຣະວິຫານຂອງພຣະຢາເວທັງຫມົດ, ແລະຊັບສົມບັດໃນພະຣາຊະວັງຂອງກະສັດ.
ພະອົງໄດ້ຕັດເຄື່ອງໃຊ້ທອງຄຳ ທີ່ກະສັດໂຊໂລໂມນ ແຫ່ງອິສະຣາເອນໄດ້ສ້າງຂຶ້ນໃນພຣະວິຫານຂອງພຣະຢາເວ, ອອກເປັນທ່ອນ
ໆດັ່ງທີ່ພຣະຢາເວໄດ້ກ່າວໄວ້ກ່ອນແລ້ວວ່າຈະເກີດຂຶ້ນ. 14ພະອົງໄດ້ຊົງຈັບເອົາຊະເລີຍທັງຫມົດ ຂອງເຢຣູຊາເລັມໄປ, ຄືຜູ້ນຳທຸກຄົນ,
ນັກຮົບທຸກຄົນ, ເປັນຊະເລີຍສິບພັນຄົນ. ລວມທັງຊ່າງຫັຖະ ກຳ ແລະຊ່າງສີມືທຸກຄົນ ບໍ່ມີຜູ້ໃດເລີຍນອກຈາກປະຊາຊົນໃນທີ່ດິນທີ່ທຸກຍາກທີ່ສຸດ.
15ເນບູກາດເນັດຊາ ໄດ້ຊົງນຳເຢໂຮຍອາກິມໄປເປັນຊະເລີຍໃນບາບີໂລນ, ລວມທັງແມ່ຂອງກະສັດ, ບັນດາມະເຫສີ, ຂ້າຣາຊສຳນັກຂອງພະອົງ,
ແລະຫົວຫນ້າຂອງແຜ່ນດິນເຊັ່ນກັນ. ພະອົງໄດ້ ນຳ ພວກເຂົາຈາກກຸງເຢຣູຊາເລັມໄປບາບີໂລນເພື່ອເປັນຊະເລີຍ. 16ນັກຮົບທັງຫມົດ, ເຈັດພັນຄົນ
ຊ່າງຝີມື, ແລະຊ່າງແກະສະຫລັກ, ຈຳນວນຫນຶ່ງພັນຄົນ ແລະທຸກຄົນເຫມາະ ສົມກັບການສູ້ຮົບ ກະສັດແຫ່ງບາບີໂລນໄດ້ ນຳ
ເອົາຄົນເຫລົ່ານີ້ໄປສູ່ບາບີໂລນໃນການເປັນຊະເລີຍ. 17ກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງທ່ານ ມັດຕານີຢາ,
ບັນພະບຸຣຸດຂອງເຢໂຮຍອາກິນຂຶ້ນເປັນກະສັດແທນພະອົງ, ແລະໄດ້ປ່ຽນຊື່ເປັນເຊເດກີຢາ.
18ເຊເດກີຢາມີອາຍຸໄດ້ ຊາວເອັດປີ ເມື່ອພະອົງໄດ້ຊົງຄອງຣາຊ; ພະອົງໄດ້ປົກຄອງໃນກຸງເຢຣູຊາເລັມ. ແມ່ຂອງພະອົງຊື່ວ່າຮາມູຕານ;
ນາງເປັນລູກສາວ ຂອງເຢລີມີຢາ ຊາວລິບນາ. 19ພະອົງຊົງໄດ້ເຮັດສິ່ງຊົ່ວຮ້າຍໃນສາຍຕາຂອງພຣະຢາເວ;
ພະອົງໄດ້ຊົງເຮັດທຸກຢ່າງຕາມທີ່ເຢໂຮຍອາກິມໄດ້ເຮັດ. 20ເພາະຄວາມໂກດຮ້າຍຂອງພຣະຢາເວ,
ສິ່ງເຫລົ່ານີ້ທັງປວງຈຶ່ງໄດເກີດຂຶ້ນຕໍ່ເຢຣູຊາເລັມແລະຢູດາ, ຈົນເຖິງພຣະອົງໄດ້ຊົງຂັບໄລ່ທັງສອງໄປໃຫ້ພົ້ນຫນ້າຂອງພຣະອົງ. ແລ້ວເຊເດກີຢາ
ກໍໄດ້ຊົງກະບົດຕໍ່ບາບີໂລນ.

 generated on Tue Jun 17 19:01:42 2025

# 25

[1]ເຫດການນີ້ເກີດຂຶ້ນໃນປີທີເກົ້າຂອງການປົກຄອງຂອງກະສັດເຊເດກີຢາ, ໃນເດືອນທີສິບ, ແລະໃນມື້ທີສິບ,
ເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ຊົງຍົກກອງທັບທັງຫມົດ ຂອງພະອົງໄປໂຈມຕີເມືອງເຢຣູຊາເລັມ.
ພະອົງໄດ້ຕັ້ງຄ້າຍພັກຢູ່ທາງກົງກັນຂ້ວາມ, ແລະພວກເຂົາກໍ່ສ້າງ ກໍາ ແພງອ້ອມມັນອີກ.
[2]ດັ່ງນັ້ນເມືອງນັ້ນຈຶ່ງຖືກລ້ອມຈົນຮອດປີທີສິບເອັດຂອງກະສັດເຊເດກີຢາ.[3]ໃນວັນທີເກົ້າຂອງເດືອນທີສີ່ໃນປີນັ້ນ
ໃນເມືອງນັ້ນມີຄວາມອຶດຢາກຮຸນແຮງ. ບໍ່ມີອາຫານ ສໍາ ລັບປະຊາຊົນໃນແຜ່ນດິນ.

[4]ຈາກນັ້ນເມືອງກໍ່ແຕກສະຫລາຍ. ແລະທະຫານທັງຫມົດ ໄດ້ຫນີອອກໄປໃນຕອນກາງຄືນຜ່ານປະຕູເມືອງໃນລະຫວ່າງກໍາແພງທັງສອງດ້ານ,
ທີ່ຢູ່ຂ້າງສວນຂອງກະສັດ, ເຖິງແມ່ນວ່າຊາວເຄເດຍຈະຢູ່ອ້ອມຮອບເມືອງ, ກະສັດໄດ້ອອກໄປຜ່ານທະເລຊາຍ ອາຣາບາ.
[5]ແຕ່ກອງທັບຂອງຊາວເຄເດຍໄດ້ໄລ່ຕາມກະສັດເຊເດກີຢາ. ແລະໄດ້ມາພົບລາວໃນເຂດທົ່ງພຽງແມ່ນ້ຳຈໍແດນໃກ້ກັບເມືອງ ເຢຣີໂກ.
ກອງທັບທັງຫມົດຂອງພະອົງກໍກະຈັດກະຈາຍໄປຈາກລາວ.
[6]ດັ່ງນັ້ນພວກເຂົາຈຶ່ງຈັບກະສັດ ແລະໄດ້ພາລາວໄປຫາກະສັດແຫ່ງບາບີໂລນທີ່ ເມືອງຣິບລາ, ບ່ອນທີ່ພວກເຂົາລົງໂທດພະອົງ.[7]ສໍາ
ລັບລູກຊາຍທຸກຄົນຂອງເຊເດກີຢາ, ພວກເຂົາຖືກຂ້າຕໍ່ ຫນ້າ ຂອງພະອົງ. ຫລັງຈາກນັ້ນ, ເຂົາໄດ້ຄວັກຕາຂອງເຊເດກີຢາອອກ
ຕີສາຍໂສ້ທອງເຫລືອງ ແລະໄດ້ພາລາວໄປບາບີໂລນ
[8]ບັດນີ້, ໃນມື້ທີເຈັດ, ເດືອນທີຫ້າ, ຊຶ່ງເປັນປີທີເກົ້າ, ແຫ່ງການປົກຄອງຂອງກະສັດເນບູກາດເນັດຊາກະສັດແຫ່ງບາບີໂລນ, ເນບູກາດເນັດຊາ,
ເຊິ່ງເປັນຜູ້ປົກຄອງຂອງກະສັດແຫ່ງບາບີໂລນ ແລະເປັນຜູ້ບັນຊາການທະຫານຜູ້ຮັກສາພະອົງ ມາຮອດກຸງເຢຣູຊາເລັມ.
[9]ພວກເຂົາໄດ້ເຜົາພຣະວິຫານຂອງພຣະຢາເວ, ຣາຊະວັງຂອງກະສັດ, ແລະບ້ານເຮືອນທັງຫມົດ ຂອງເຢຣູຊາເລັມ;
ເຂົາຍັງໄດ້ເຜົາທໍາລາຍອາຄານສໍາຄັນທັງຫມົດໃນເມືອງ.[10]ສໍາລັບກໍາແພງອ້ອມເມືອງເຢຣູຊາເລັມ,
ທະຫານຊາວບາບີໂລນທຸກຄົນທີ່ຢູ່ກັບຜູ້ບັນຊາການກອງເຝົ້າຍາມໄດ້ຖືກ ທໍາ ລາຍແລ້ວ.
[11]ສ່ວນປະຊາຊົນທີ່ເຫລືອຂອງຜູ້ທີ່ອາສັຍຢູ່ໃນເມືອງ, ແລະຜູ້ທີ່ຫນີໄປຫາກະສັດແຫ່ງບາບີໂລນ, ແລະກັບມະຫາຊົນທີ່ຍັງເຫລືອຢູ່ນັ້ນ
ເນບູຊາຣະດານ, ຜູ້ບັນຊາການກອງ ທະຫານຮັກສາພະອົງ, ໄດ້ຈັບພວກເຂົາໄປເປັນຊະເລີຍ.
[12]ແຕ່ຜູ້ບັນຊາການທະຫານຮັກສາພະອົງໄດ້ປະປະຊາຊົນຜູ້ທຸກຍາກທີ່ສຸດໃນດິນແດນໄວ້ໃຫ້ເປັນຄົນເຮັດສວນອະງຸ່ນແລະເປັນຄົນເຮັດໄຮ່ໄຖນາ.
[13]ສໍາລັບເສົາທອງແດງທີ່ຢູ່ໃນພຣະວິຫານຂອງພຣະຢາເວ,
ແລະແທ່ນບູຊາແລະພື້ນຖານຂອງທະເລທອງແດງທີ່ຢູ່ໃນພຣະວິຫານຂອງພຣະຢາເວນັ້ນ, ຊາວເຄເດຍໄດ້ທຸບເປັນປ່ຽງໆ.
ແລະໄດ້ຂົນເອົາທອງແດງໄປທີ່ບາບີໂລນ.[14]ບັນດາຫມໍ້, ຊ້ວານ, ແລະມີດຕັດໄສ້ຕະກຽງ,
ແລະບ່ວງແລະເຄື່ອງໃຊ້ທອງແດງທັງຫມົດຊຶ່ງປະໂລຫິດໃຊ້ໃນງານຂອງພຣະວິຫານ ພວກຊາວເຄເດຍເອົາໄປຫມົດ.
[15]ກະຖາງສໍາລັບຕັກຂີ້ເຖົ່າພ້ອມດ້ວຍຊາມເຮັດດ້ວຍທອງຄໍາ, ແລະເງິນ ຜູ້ບັນຊາການທະຫານຮັກສາພະອົງກໍໄດ້ຂົນເອົາໄປຫມົດດ້ວຍ.
[16]ເສົາໃຫຍ່ສອງເສົາ, ອ່າງທະເລ, ແລະພວກຂາຕັ້ງທີ່ໂຊໂລໂມນໄດ້ສ້າງ ສໍາ ລັບພຣະວິຫານຂອງພຣະຢາເວນັ້ນ
ທອງແດງຂອງພາຊະນະເຫລົ່ານີ້ກໍ່ຫນັກ ເກີນກວ່າທີ່ຈະຊັ່ງໄດ້.[17]ເປັນເສົາໃຫຍ່ທີ່ສູງປະມານສິບແປດສອກ, ແລະມີບົວຂວ້ຳທອງແດງເທິງເສົາ,
ບົວຂວ້ຳນັ້ນສູງປະມານສາມສອກ, ມີຕາ ຫນ່າງ ແລະລູກທັບທິມທີ່ອ້ອມຮອບບົວ. ທັງ ຫມົດ ແມ່ນເຮັດດ້ວຍທອງແດງ.
ເສົາໃຫຍ່ອີກຕົ້ນແລະຕາຫນ່າງແມ່ນຄ້າຍຄືກັບເສົາຕົ້ນ ທໍາ ອິດ.
[18]ຜູ້ບັນຊາການທະຫານຮັກສາພະອົງກໍໄດ້ຈັບເອົາເຊຣາອີຢາປະໂລຫິດໃຫຍ່, ແລະເຊຟານີຢາຮອງປະໂລຫິດ, ກັບຜູ້ເຝົ້າປະຕູສາມຄົນໄປດ້ວຍ.
[19]ຈາກເມືອງນັ້ນ, ລາວໄດ້ຈັບຂ້າຣາຊສໍານັກ. ເຊິ່ງແມ່ນຜູ້ບັນຊາການກອງທັບ ສະມາຊິກສະພາຂອງກະສັດທັງ 5
ຄົນທີ່ຍັງຄົງຢູ່ໃນເມືອງນັ້ນແມ່ນເປັນນັກໂທດ. ນອກນັ້ນທ່ານຍັງໄດ້ ນໍາ ເອົາເຈົ້າຫນ້າ
ທີ່ຣັຖະບານຂອງກະສັດທີ່ຮັບຜິດຊອບແຕ່ງຕັ້ງຜູ້ຊາຍເຂົ້າເປັນທະຫານ. ກັບຊາຍຫົກສິບຄົນຂອງແຜ່ນດິນທີ່ຖືກພົບເຫັນໃນເມືອງເປັນນັກໂທດ.
[20]ແລ້ວເນບູຊາຣາດານ, ຜູ້ບັນຊາການທະຫານຮັກສາພະອົງໄດ້ຈັບພວກເຂົາເຫລົ່ານີ້, ແລະນໍາລາວໄປຫາກະສັດບາບີໂລນທີ່ ຣິບລາ.
[21]ກະສັດແຫ່ງບາບີໂລນໄດ້ຂ້າພວກເຂົາທີ່ ຣິບລາ ໃນເມືອງ ຮາມັດ. ໃນວິທີການນີ້,
ຢູດາໄດ້ເຂົ້າໄປໃນການເປັນຊະເລີຍຈາກແຜ່ນດິນຂອງຕົນເອງ.
[22]ສໍາ ລັບປະຊາຊົນທີ່ເຫລືອໃນແຜ່ນດິນຢູດາ, ຜູ້ທີ່ເນບູກາດເນັດຊາ ກະສັດແຫ່ງບາບີໂລນໄດ້ຊົງເຫລືອໄວ້,
ພະອົງໄດ້ຊົງແຕ່ງຕັ້ງເກດາລີຢາລູກຊາຍຂອງ ອາຮີກໍາ, ພວກລູກຊາຍຂອງຊາຟານ, ເພື່ອຄວບຄຸມພວກເຂົາ.[23]ບັດນີ້,
ເມື່ອຜູ້ບັນຊາການກອງທັບທັງຫມົດ, ພວກເຂົາ ແລະຄົນຂອງເຂົາໄດ້ຍິນແນວນັ້ນ ກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງເກດາລີຢາໃຫ້ເປັນຜູ້ປົກຄອງ.
ພວກເຂົາມາຮອດເກດາລີຢາທີ່ເມືອງມີຊະປາ. ພວກນີ້ແມ່ນອິດຊະມາເອນ, ພວກລູກຊາຍຂອງເນທານີຢາ, ໂຢຮານານລູກຊາຍຂອງກາເຣຢາ,
ເສຣາອີຢາ ລູກຊາຍຂອງຕັນຮູເມັດ, ຊາວເນໂຕຟາ, ແລະ ຢາອາຊານີຢາລູກຊາຍຂອງ ຕະກູນມາອາກາ
ທັງຕົວຂອງເຂົາເອງແລະຜູ້ຄົນຂອງພວກເຂົາ.[24]ກີເດໂອນໄດ້ສາບານກັບພວກເຂົາແລະຜູ້ຄົນຂອງພວກເຂົາ, ໂດຍກ່າວວ່າ, “
ຢ່າຢ້ານພວກຂ້າຣາຊະການ ເຄເດຍເລີຍ ຈົ່ງອາສັຍຢູ່ໃນແຜ່ນດິນແລະຮັບໃຊ້ກະສັດແຫ່ງບາບີໂລນ. ຈາກນັ້ນທ່ານຈະຢູ່ເຢັນເປັນສຸກ."
[25]ແຕ່ໃນເດືອນທີເຈັດ ອິດຊະມາເອນ, ລູກຊາຍຂອງ ເນທານີຢາ ລູກຊາຍຂອງເອຣີຊາມາ, ຄອບຄົວຣາຊະວົງ ໄດ້ເຂົ້າມາພ້ອມກັບຊາຍສິບຄົນ
ໄດ້ໂຈມຕີເກດາລີຢາ. ເກດາຣີຢາ, ໄດ້ເສຍຊີວິດກັບຄົນຂອງຢູດາແລະຊາວບາບີໂລນຜູ້ທີ່ຢູ່ກັບລາວທີ່ ມີຊະປາ.[26]ແລ້ວປະຊາຊົນທຸກຄົນ,
ທັງຄົນນ້ອຍແລະຜູ້ເຖົ້າຜູ້ແກ່, ແລະຜູ້ບັນຊາການກອງທັບໄດ້ລຸກຢືນຂຶ້ນ. ແລະໄປອີຢິບ ເພາະວ່າພວກເຂົາຢ້ານຊາວບາບີໂລນ.
[27]ຕໍ່ມາໃນປີທີສາມສິບເຈັດທີ່ເຢໂຮອາກິນກະສັດແຫ່ງຢູດາ, ໄດ້ຖືກເນຣະເທດໃນເດືອນທີສິບສອງ. ໃນວັນທີຊາວເຈັດຂອງເດືອນນັ້ນ,
ທີ່ເອວິນເມໂຣດັກກະສັດແຫ່ງບາບີໂລນ, ໄດ້ປ່ອຍຕົວ ເຢໂຮຍອາກິນກະສັດແຫ່ງຢູດາ ອອກຈາກຄຸກ. ສິ່ງນີ້ໄດ້ເກີດຂຶ້ນໃນປີທີ່ ເອວິນເມໂຣດັກ
ຂຶ້ນຄອງບັນລັງ.

28ກະສັດໄດ້ເວົ້າດ້ວຍຄວາມເມດຕາຕໍ່ເພິ່ນ ແລະໃຫ້ມີບ່ອນນັ່ງທີ່ມີກຽດສູງກວ່າທີ່ນັ່ງຂອງບັນດາກະສັດທັງຫມົດ ທີ່ຢູ່ໃນກຸງບາບີໂລນກັບພະອົງ.
29ເອວິນເມໂຣດັກຈຶ່ງໄດ້ຖອດເສື້ອຜ້າຂອງນັກໂທດອອກເຢໂຮຍອາກີນ, ແລະໄດ້ກິນອາຫານເປັນປະ ຈໍາ ຢູ່ທີ່ໂຕະກະສັດ. ທຸກໆມື້ຂອງຊີວິດລາວ.
30ສ່ວນຄ່າໃຊ້ຈ່າຍ ນັ້ນກໍໄດ້ຮັບອະນຸຍາດຈາກກະສັດ. ອີງຕາມຄວາມຕ້ອງການຂອງແຕ່ລະມື້ຕະຫລອດຊີວິດຂອງລາວ.

# 1 ຂ່າວຄາວ

1 1ອາດາມ, ເຊດ, ເອໂນດ, 2ເກນານ, ມາຮາລາເລນ, ຢາເຣັດ, 3ເອໂນກ, ເມທູເຊລາ, ລາເມັກ. 4ລູກຊາຍທັງຫລາຍຂອງໂນອາຄື, ເຊມ ຮາມ
ແລະ ຢາເຟດ.

5ລູກຊາຍທັງຫລາຍຂອງຢາເຟດຄື ໂກເມ, ມາໂຄກ, ມາດາຍ, ຢາວານ, ຕູບານ, ເມເຊັກ, ແລະ ຕີຣາດ. 6ລູກຊາຍທັງຫລາຍຂອງໂກເມຄື
ອັດຊະເກນາດ, ຣີຟາດ ແລະ ໂຕການມາ. 7ລູກຊາຍທັງຫລາຍຂອງຢາວານຄື ເອລີຊາ, ຕາຊິດ, ກິດຕີມ ແລະໂດດານີມ.
8ລູກຊາຍທັງຫລາຍຂອງຮາມຄື ກູເຊ, ມິດຊະຣາຢິມ, ພຸດ ແລະ ການາອານ. 9ລູກຊາຍທັງຫລາຍຂອງກູເຊ ຄື ເສບາ, ຮາວິລາ, ສັບຕາ,
ຣາອາມາ ແລະ ສັບເຕກາ. ລູກຊາຍຂອງຣາອາມາຄື ເຊບາ ແລະ ເດດານ. 10ກູເຊເປັນພໍ່ຂອງນິມໂລດ,
ຊຶ່ງຜູ້ນີ້ເປັນຜູ້ທໍາອິດທີ່ເກັ່ງກ້າເທິງແຜ່ນດິນໂລກ.
11ມິດຊະຣາຢິມເປັນບັນພະບຸຣຸດຂອງ ລູດີ, ພວກອານາມີມ, ພວກເລຮາບີມ, ພວກນັບຕູຮີມ, 12ກັບພວກປັດຣູສີ, ພວກກັດສະລູຮີມ
(ພວກຟີລິດສະຕິນໄດ້ເກີດອອກມາຈາກພວກນີ້) ແລະ ພວກກັບໂຕຣີ.
13ການາອານເປັນບິດາຂອງຊີໂດນ, ລູກຫົວປີ, ແລະ ເຮດ. 14ເຂົາເປັນບັນພະບຸຣຸດຂອງຄົນເຢບຸດ, ຄົນອະໂມຣິດ, ຄົນກີກາຊີ, 15ຄົນອາກີ, ຄົນສີນີ,
16ຄົນເຊມາ ແລະ ຄົນຮາມັດ.
17ລູກຊາຍທັງຫລາຍຂອງເຊມຄື ເອລາມ, ອັດຊີເຣຍ, ອາປັກຊາດ, ລູດ, ອາຣາມ, ອູເຊ, ຮຸນ, ເກເທ ແລະ ເມເຊັກ.
18ອາປັກຊາດເປັນບິດາຂອງເຊລາ, ແລະ ເຊລາເປັນບິດາຂອງເຮເບ. 19ເຮເບມີລູກຊາຍສອງຄົນ. ຄົນຫນຶ່ງຊື່ເປເລັກ, ເພາະໃນສະໄຫມຂອງເພິ່ນ
ແຜ່ນດິນຖືກແບ່ງປັນກັນ. ນ້ອງຊາຍຂອງລາວຊື່ໂຢກຕານ.
20ໂຢກຕານເປັນບິດາຂອງອານໂມດາດ, ເຊເລັບ, ຮາຊາມາເວດ, ເຢຣາ, 21ຮາໂດຣາມ, ອູຊານ, ດິກລາ, 22ເອບານ, ອາບີມາເອນ, ເຊບາ, 23ໂອຟີ,
ຮາວິລາ ແລະ ໂຢບັບ; ຄົນເຫລົ່ານີ້ເປັນລູກຊາຍທັງຫລາຍຂອງໂຢກຕານ.
24ເຊມ, ອາປັກຊາດ, ເຊລາ, 25ເຮເບ, ເປເລັກ, ເຣອູ, 26ເສຣຸກ, ນາໂຮ, ເຕຣາ, 27ອັບຣາມ, ຜູ້ເປັນອັບຣາຮາມ.
28ລູກຊາຍຂອງອັບຣາຮາມ ຊື່ ອີຊາກ ແລະ ອິຊະມາເອນ. 29ຄົນເຫລົ່ານີ້ເປັນລູກຊາຍທັງຫລາຍຂອງພວກເຂົາ: ລູກຫົວປີຂອງອິຊະມາເອນຄື
ເນບາໂຢດ, ແລະ ເກດາ, ອັດເບເອນ, ມິບສາມ, 30ມິດມາ, ດູມາ, ມັດສາ, ຮາດັດ, ເຕມາ, 31ເຢທູ, ນາຟິດ, ແລະ ເກເດມາ.
ຄົນເຫລົ່ານີ້ເປັນລູກຊາຍຂອງອິຊະມາເອນ.
32ລູກຊາຍທັງຫລາຍຂອງນາງເກຕຸຣາ, ເມຍນ້ອຍຂອງອັບຣາຮາມ, ນາງໃຫ້ກໍາເນີດລູກຊື່ ຊິມຣານ, ໂຢກຊານ ເມດານ, ມີດີອານ, ອີຊະບາກ
ແລະ ຊູອາ. ລູກຊາຍທັງຫລາຍຂອງໂຢກຊານ ຊື່ເຊບາ ແລະ ເດດານ. 33ລູກຊາຍຂອງເມດີອານຄື ເອຟາ, ເອເຟ, ຮາໂນກ, ອາບີດາ ແລະ
ເອັນດາອາ. ທັງຫມົດນີ້ເປັນລູກຫລານຂອງນາງເກຕຸຣາ.
34ອັບຣາຮາມເປັນບິດາຂອງອີຊາກ. ລູກຊາຍຂອງອີຊາກ ຊື່ ເອຊາວ ແລະ ອິສະຣາເອນ. 35ລູກຊາຍຂອງເອຊາວຊື່ ເອລີຟັດ, ເຣອູເອນ, ເຢອຸດ,
ຢາລາມ ແລະ ໂກຣາ. 36ລູກຊາຍຂອງເອລີຟັດຊື່ ເຕມານ, ໂອມາ, ເຊຟີ, ກາຕາມ, ເກນັດ, ຕີມນາ ແລະ ອໍາມາເລັກ. 37ລູກຊາຍຂອງເຣອູເອນຊື່
ນາຮາດ, ເຊຣາ, ຊາມມາ ແລະ ມິດຊາ.
38ລູກຊາຍຂອງເສອີຊື່ ໂລຕັນ, ໂຊບານ, ຊີເບໂອນ, ອານາ, ດີໂຊນ, ເອເຊ, ເອເຊີ ແລະ ດີຊານ. 39ລູກຊາຍຂອງໂລຕັນຊື່ ໂຮຣີ ແລະ ໂຮມາມ,
ແລະ ນ້ອງສາວຂອງໂລຕັນຊື່ຕີມນາ. 40ລູກຊາຍຂອງໂຊບານຊື່ ອາລີອານ, ມານາຮາດ, ເອບານ, ເຊຟີ ແລະ ໂອນາມ. ລູກຊາຍຂອງຊີເບໂອນຊື່
ອາອີຢາ ແລະ ອານາ.
41ລູກຊາຍຂອງອານາຊື່ ດີໂຊນ. ລູກຊາຍຂອງດີໂຊນ ຊື່ ຮໍາຣານ, ເອຊະບານ, ອິດຣັນ ແລະ ເກຣານ. 42ລູກຊາຍຂອງເອເຊຊື່ ບິນຮານ,
ຊາອາວານ ແລະ ຢາອາການ. ລູກຊາຍຂອງດີຊານຊື່ ອູເຊ ແລະ ອາຣານ.
43ຕໍ່ໄປນີ້ແມ່ນກະສັດຜູ້ທີ່ປົກຄອງຢູ່ໃນແຜ່ນດິນເອໂດມ ກ່ອນທີ່ຈະມີກະສັດປົກຄອງຄົນອິສະຣາເອນຄື ເບລາລູກຊາຍຂອງເບໂອ, ແລະ
ເມືອງຫລວງຂອງເພິ່ນຊື່ດິນຮາບາ. 44ເມື່ອເບລາເສຍຊີວິດ, ໂຢບັບລູກຊາຍເຊຣາຊາວເມືອງໂບຊະຣາກໍຂຶ້ນປົກຄອງແທນ. 45ເມື່ອໂຢບັບເສຍຊີວິດ,
ຮູຊາມຊາວເມືອງເຕມານກໍຂຶ້ນປົກຄອງແທນ.
46ເມື່ອຮູຊາມເສຍຊີວິດ, ຮາດັດລູກຊາຍຂອງເບດັດ, ຜູ້ທີ່ສູ້ຮົບຊະນະຄົນມີດີອານໃນດິນແດນຂອງໂມອາບ, ກໍຂຶ້ນປົກຄອງແທນ.
ໃນເມືອງຫລວງຂອງເພິ່ນຊື່ ອາວິດ. 47ເມື່ອຮາດັດເສຍຊີວິດ, ສາມລາຊາວເມືອງມາຊະເຣກາກໍຂຶ້ນປົກຄອງແທນ. 48ເມື່ອສາມລາເສຍຊີວິດ,
ຊາອູນຊາວເມືອງເຣໂຮໂບດຣັນນາຮາກໍຂຶ້ນປົກຄອງແທນ.
49ເມື່ອຊາອູນເສຍຊີວິດ, ບາອານ ຮານານລູກຊາຍຂອງອັກໂບກໍຂຶ້ນປົກຄອງແທນ. 50ເມື່ອບາອານ ຮານານລູກຊາຍຂອງອັກໂບເສຍຊີວິດ,
ຮາດັດກໍຂຶ້ນປົກຄອງແທນ. ເມືອງຫລວງຂອງເພິ່ນຊື່ ປາອີ. ມະເຫສີຂອງເພິ່ນຊື່ ເມເຮຕາເບນ
ຊຶ່ງເປັນລູກສາວຂອງນາງມາດເຣັດລູກສາວຂອງເມຊາຮາບ.
51ຮາດັດກໍເສຍຊີວິດ. ພວກເຈົ້ານາຍຂອງເອໂດມມີຄື ເຈົ້າຕີມນາ, ເຈົ້າອັນວາ, ເຈົ້າເຢເທັດ, 52ເຈົ້າໂອໂຮລີບາມາ, ເຈົ້າເອລາ, ເຈົ້າປີໂນນ,
53ເຈົ້າເກນັດ, ເຈົ້າເຕມານ, ເຈົ້າມິບຊາ, 54ເຈົ້າມັກດີເອວ, ແລະ ເຈົ້າອີຣາມ. ຄົນເຫລົ່ານີ້ແມ່ນພວກເຈົ້ານາຍຂອງເອໂດມ.


generated on Tue Jun 17 19:01:42 2025

2 1ຕໍ່ໄປນີ້ເປັນລູກຊາຍຂອງອິສະຣາເອນຄື ຣູເບັນ, ຊີເມໂອນ, ເລວີ, ຢູດາ, ອິດຊາຄາ, ເຊບູລູນ, 2ດານ, ໂຢເຊັບ, ເບັນຢາມິນ, ນັບທາລີ, ຄາດ,
ແລະ ອາເຊ.

3ລູກຊາຍຂອງຢູດາຊື່ ເອຣະ, ໂອນານ ແລະ ເຊລາ, ທັງສາມຄົນນີ້ເກີດຈາກລູກສາວຂອງຊູອາ, ຄົນການາອານ.
ຝ່າຍເອຣະລູກຊາຍກົກຂອງຢູດາ, ເປັນຄົນຊົ່ວຮ້າຍຕໍ່ສາຍພຣະເນດຂອງພຣະຢາເວ, ແລະ ພຣະຢາເວໄດ້ປະຫານຊີວິດລາວເສຍ. 4ຕາມາ,
ລູກໄພ້ຂອງຢູດາ, ໄດ້ກຳເນີດເປເຣັດ ແລະ ເຊຣາ. ລູກຊາຍທັງຫມົດຂອງຢູດາມີຫ້າຄົນ.
5ລູກຊາຍຂອງເປເຣັດຊື່ ເຮດຊະໂຣນ ແລະ ຮາມູນ. 6ລູກຊາຍທັງຫລາຍຂອງເຊລາຄື ຊິມຣີ, ເອທານ, ເຮມານ, ການໂກນ ແລະ ດາຣາ,
ທັງຫມົດມີຫ້າຄົນ. 7ລູກຊາຍຂອງຄາມີຄືອາຄານ, ຜູ້ນຳຄວາມເດືອດຮ້ອນມາໃຫ້ແກ່ອິສະຣາເອນ
ເມື່ອລັກເອົາສິ່ງຂອງທີ່ສະຫງວນໄວ້ໃຫ້ພຣະເຈົ້າ. 8ລູກຊາຍຂອງເອທານຊື່ ອາຊາຣີຢາ.
9ລູກຊາຍຂອງເຮດຊະໂຣນຊຶ່ງເກີດແກ່ເພິ່ນນັ້ນຄື ເຢຣາເມເອນ, ລາມ, ແລະ ເຊລູໄບ. 10ລາມເປັນບິດາຂອງອຳມີນາດາບ, ແລະ
ອຳມີນາດາບເປັນບິດາຂອງນາໂຊນ, ເຈົ້ານາຍໃນລູກຫລານຂອງຢູດາ. 11ນາໂຊນເປັນບິດາຂອງຊັນໂມນ, ແລະ ຊັນໂມນເປັນບິດາຂອງໂບອາດ.
12ໂບອາດເປັນບິດາໂອເບັດ, ແລະ ໂອເບັດເປັນບິດາ ເຢຊີ.
13ເຢຊີເປັນບິດາຂອງເອລີອາບລູກຫົວປີຂອງເພິ່ນ, ອາບີນາດາບຜູ້ທີສອງ, ຊີເມອາຜູ້ທີສາມ, 14ເນທາເນນຜູ້ທີສີ່, ຣັດດາຍຜູ້ທີຫ້າ, 15ໂອເຊມຜູ້ທີຫົກ,
ແລະ ດາວິດຜູ້ທີເຈັດ.
16ເອື້ອຍຂອງລາວຄື ເຊຣູຢາ ແລະ ອາບີກາຍ. ລູກຊາຍຂອງນາງເຊຣູຢາຊື່ ອາບີຊາຍ, ໂຢອາບ, ແລະ ອາສາເຮນ ສາມຄົນນຳກັນ.
17ອາບີກາຍເປັນບິດາອາມາສາ, ແລະພໍ່ຂອງອາມາສາຊື່ເຢເທຄົນອິຊະມາເອນ.
18ກາເລັບລູກຊາຍເຮດຊະໂຣນໄດ້ລູກກັບອາຊູບາເມຍຂອງຕົນ, ແລະ ນາງເຢຣີໂອດທີ່ມີລູກຊາຍຊື່ ເຢເຊ, ໂຊບາບ ແລະອາໂດນ.
19ເມື່ອອາຊູບາເສຍຊີວິດ, ແລະ ຫລັງຈາກນັ້ນກາເລັບກໍແຕ່ງງານກັບເອຟຣາທາ, ແລະໄດ້ລູກຊື່ຮູເຣໃຫ້ແກ່ເພິ່ນ. 20ຮູເຣເປັນບິດາຂອງອຸຣີ, ແລະ
ອຸຣີເປັນບິດາຂອງເບຊາເລນ.
21ພາຍຫລັງທີ່ເຮດຊະໂຣນ (ເມື່ອເພິ່ນມີອາຍຸຫົກສິບປີ) ໄດ້ແຕ່ງງານກັບລູກສາວຂອງມາຄີ, ພໍ່ຂອງກີເລອາດ. ນາງໄດ້ກຳເນີດລູກໃຫ້ເພິ່ນຊື່
ເສກຸບ. 22ເສກຸບເປັນບິດາຂອງຢາອີ, ຜູ້ມີຫົວເມືອງຊາວສາມຫົວເມືອງໃນແຜ່ນດິນກີເລອາດ.
23ພວກເກຊູກັບພວກອາຣາມໄດ້ຍຶດເອົາຫົວເມືອງຕ່າງໆຂອງຢາອີ ແລະ ຫົວເມືອງເກນາດ, ລວມທັງບັນດາຫົກສິບຫົວເມືອງອ້ອມຮອບດ້ວຍກັນ.
ຄົນເຫລົ່ານີ້ເປັນລູກຫລານຂອງມາກີພໍ່ຂອງກີເລອາດ. 24ພາຍຫລັງເຮດຊະໂຣນເສຍຊີວິດ, ກາເລັບໄດ້ຫລັບນອນກັບເອຟຣາທາ,
ເມຍຂອງເຮດຊະໂຣນພໍ່ຂອງເຂົາ. ນາງຍັງໄດ້ເກີດລູກໃຫ້ແກ່ທ່ານຊື່ ອາຊະຮູ, ຜູ້ເປັນພໍ່ຂອງເຕໂກອາ.
25ບັນດາລູກຊາຍຂອງເຢຣາເມເອນ, ລູກຫົວປີຂອງເຮດຊະໂຣນ, ຄື ຣາມເປັນລູກຫົວປີຂອງເພິ່ນ, ບູນາ, ໂອເຣັນ ໂອເຊມ, ແລະ ອາຮີຢາ.
26ເຢຣາເມເອນມີເມຍອີກຄົນຫນຶ່ງຊື່ອາຕາຣາ. ນາງເປັນແມ່ຂອງໂອນາມ. 27ລູກຊາຍຂອງລາມ, ລູກຫົວປີຂອງເຢຣາເມເອນຊື່ ມາອາດ, ຢາມິນ
ແລະ ເອເກ. 28ລູກຊາຍຂອງໂອນາມຊື່ວ່າ ຊາມມາຍ ແລະ ຢາດາ. ລູກຊາຍຂອງຊາມມາຍຊື່ ນາດາບ ແລະ ອາບີຊູ.
29ເມຍຂອງອາບີຊູຊື່ອາບີຮາຍ, ແລະ ນາງໄດ້ເກີດອາຮະບານ ແລະ ໂມລິດໃຫ້ແກ່ເພິ່ນ. 30ລູກຊາຍຂອງນາດາບຊື່ ເສເລັດ ແລະ ອັບປາຢິມ,
ແຕ່ເສເລັດໄດ້ຕາຍໄປເມື່ອຍັງບໍ່ມີລູກ. 31ລູກຊາຍຂອງອັບປາຢິມຊື່ ອີຊີ. ລູກຊາຍຂອງອີຊີຊື່ ເຊຊານ. ລູກຊາຍຂອງເຊຊານຊື່ ອາຣະລາຍ.
32ລູກຊາຍຂອງຢາດາ, ນ້ອງຊາຍຂອງຊາມມາຍຊື່ວ່າ ເຢເທ ແລະ ໂຢນາທານ. ເຢເທໄດ້ຕາຍໄປເມື່ອຍັງບໍ່ມີລູກ.
33ລູກຊາຍຂອງໂຢນາທານຊື່ເປເລດ ແລະ ຊາຊາ. ຄົນເຫລົ່ານີ້ເປັນລູກຫລານຂອງເຢຣາເມເອນ.
34ຝ່າຍເຊຊານບໍ່ມີລູກຊາຍ, ມີແຕ່ລູກສາວ. ເຊຊານມີຂ້າໃຊ້, ຊາວເອຢິບຢູ່ຄົນຫນຶ່ງຊື່ ຢາຣະຮາ.
35ເຊຊານໄດ້ຍົກລູກສາວຂອງຕົນໃຫ້ເປັນເມຍຂອງຢາຣະຮາຂ້າໃຊ້ຂອງຕົນນັ້ນ. ນາງກໍເກີດລູກໃຫ້ລາວຊື່ ອາດຕາຍ.
36ອາດຕາຍເປັນບິດາຂອງນາທານ, ແລະ ນາທານເປັນບິດາຂອງຊາບາດ. 37ຊາບາດເປັນບິດາຂອງເອຟາລານ,
ແລະເອຟະລານເປັນບິດາຂອງໂອເບັດ. 38ໂອເບັດເປັນບິດາຂອງເຢຮູ, ແລະ ເຢຮູເປັນບິດາຂອງອາຊາຣີຢາ.
39ອາຊາຣີຢາເປັນບິດາຂອງເຮເລັດ, ແລະ ເຮເລັດເປັນບິດາຂອງເອເລອາສາ. 40ເອເລອາສາເປັນບິດາຂອງສີສະມາຍ, ແລະ
ສີສະມາຍເປັນບິດາຊານລູມ. 41ຊານລູມເປັນບິດາຂອງ ເຢກາມີຢາ ແລະ ເຢກາມີຢາເປັນບິດາເອລີຊາມາ.
42ລູກຊາຍຂອງກາເລັບ, ນ້ອງຊາຍຂອງເຢຣາເມເອນ, ຊື່ ເມຊາລູກຫົວປີຂອງເພິ່ນ, ຜູ້ຊຶ່ງເປັນພໍ່ຂອງຊີເຟ. ລູກຊາຍຜູ້ທີສອງຂອງເຂົາ,
ມາເຣຊາຜູ້ເປັນພໍ່ຂອງເຮັບໂຣນ. 43ລູກຊາຍຂອງເຮັບໂຣນຊື່ໂກຣາ, ຕັບປົວ, ເຣເກັມ, ແລະ ເຊມາ. 44ເຊມາເປັນບິດາຣາຮາມ,
ຜູ້ຊຶ່ງເປັນບິດາຂອງໂຢເກອາມ. ເຣເກັມເປັນບິດາຊາມມາຍ.
45ລູກຊາຍຂອງຊາມມາຍຄື ມາໂອນ, ແລະ ມາໂອນເປັນບິດາຂອງເບັດຊູເຣ. 46ເອຟາ, ເມຍນ້ອຍຂອງກາເລັບເກີດລູກຊື່ ຮາຣານ, ໂມຊາ, ແລະ
ກາເຊັດ. ຮາຣານເປັນພໍ່ຂອງກາເຊັດ. 47ລູກຊາຍຂອງຢາດາຍຊື່ເຣເກມ, ໂຢທານ, ເກຊານ, ເປເລັດ, ເອຟາ, ແລະ ຊາອາບ.
48ມາອາກາ, ເມຍນ້ອຍຂອງກາເລັບ, ເກີດລູກຊື່ ເຊເບ ແລະຕີຂະນາ. 49ນາງເກີດລູກຊື່ຊາອາບຜູ້ທີ່ເປັນພໍ່ຂອງມັດມານນາ,
ເຊວາຜູ້ເປັນພໍ່ຂອງມັກເບນາ ແລະ ພໍ່ຂອງກິເບອາ. ລູກສາວຂອງກາເລັບຊື່ ອັກສາ. 50ລູກຫລານຂອງກາເລັບ ລູກຊາຍຂອງຮູເຣ,
ລູກຫົວປີຂອງເອຟຣາທາ: ຊື່ ໂຊບານ ພໍ່ຂອງກີຣີຢາດເຢອາຣິມ,
51ສານມາບິດາຂອງເບັດເລເຮັມ, ແລະ ຮາເຣັບບິດາຂອງເບັດກາເດ.
52ໂຊບານບິດາຂອງ ກີຣີຢາດ ເຢອາຣິມ ມີເຊື້ອສາຍອີກຊື່: ຮາໂຣເອ ແລະ ເຄິ່ງຫນຶ່ງຂອງຄົນເມນູໂຮດ, 53ແລະ
ບັນດາຄອບຄົວຂອງກີຣີຢາດເຢອາຣິມ: ແມ່ນພວກຄອບຄົວອີດຣີ, ຄອບຄົວປູທີ, ຄອບຄົວຊູມາ ແລະ ຄອບຄົວມິດຊະຣາ. ຊາວໂຊຣາດ ແລະ
ຊາວເອຊະຕາໂອນກໍໄດ້ສືບເຊື້ອສາຍມາຈາກຄົນເຫລົ່ານີ້.
54ຕະກູນຂອງຊັນໂມນມີດັ່ງຕໍ່ໄປນີ້ຊື່ ວາເບັດເລເຮັມ, ຊາວເນໂຕຟາ, ອັດຕະໂຣດເບັດໂຢອາບ ແລະ ເຄິ່ງຫນຶ່ງຂອງຄົນ ມານາຮາດ—
ຜູ້ເປັນຊາວໂຊຣີ, 55ທັງຄອບຄົວຂອງອາລັກຊຶ່ງຢູ່ ເມືອງຢາເບດຄື ຄອບຄົວຕີຣາດ, ຄອບຄົວຊີເມອາ, ແລະ ຄອບຄົວສູກາ. ພວກເຫລົ່ານີ້
ເປັນຄົນເກນີທີ່ໄດ້ເກີດມາຈາກເຊື້ອສາຍຮຳມາດບັນພະບຸຣຸດຂອງຄອບຄົວເຣກາບ.


generated on Tue Jun 17 19:01:42 2025

3 1ຕໍ່ໄປນີ້ເປັນລູກຊາຍຂອງດາວິດທີ່ເກີດໃຫ້ແກ່ເພິ່ນໃນເມືອງເຮັບໂຣນ: ລູກຊາຍຫົວປີ ແມ່ນ ອຳໂນນ,
ລູກຂອງນາງອາຮີໂນອາມຊາວເຢດຊະເຣເອນ; ຜູ້ທີສອງຄື ດານີເອນ, ເກີດຈາກນາງອາບີກາຍຊາວກາເມນ;2ຜູ້ທີສາມຄື ອັບຊາໂລມ
ລູກຊາຍຂອງນາງມາອາກາ, ລູກສາວຂອງຕານມາຍ ກະສັດເມືອງເກຊູ. ຜູ້ທີສີ່ຄື ອາໂດນີຢາ ລູກຊາຍຂອງຮັກກີດ;3ຜູ້ທີຫ້າຄື
ເຊຟາຕີຢາລູກຂອງນາງອາບີຕານ; ຜູ້ທີຫົກຄື ອິດເຣອາມກຳເນີດຈາກນາງເອັກລາ ເມຍຂອງເພິ່ນ.

4ທັງຫົກໄດ້ເກີດໃຫ້ແກ່ດາວິດໃນເມືອງເຮັບໂຣນ, ໃນບ່ອນນັ້ນເພິ່ນໄດ້ປົກຄອງເປັນເວລາເຈັດປີກັບຫົກເດືອນ.
ພະອົງໄດ້ປົກຄອງໃນນະຄອນເຢຣູຊາເລັມລະຫວ່າງສາມສິບສາມປີ.5ລູກຊາຍທັງສີ່ທີ່ໄດ້ເກີດໃຫ້ແກ່ເພິ່ນໃນນະຄອນເຢຣູຊາເລັມຄື ຊີເມອາ,
ໂຊບາບ, ນາທານ ແລະ ໂຊໂລໂມນ.
6ລູກຊາຍອີກເກົ້າຄົນກໍມີ ອິບຮາ, ເອລີຊາມາ, ເອລີເຟເລັດ7ໂນກາ, ເນເຟັກ, ຢາເຟຍ,8ເອລີຊາມາ ເອລີອາດາ, ແລະ ເອລີເຟເລັດ,
9ທັງຫມົດນີ້ເປັນລູກຊາຍຂອງດາວິດ ນອກຈາກລູກຊາຍຂອງນາງສະຫນົມທັງຫລາຍ. ຕາມາເປັນນ້ອງສາວຂອງພວກລາວ.
10ລູກຊາຍຂອງໂຊໂລໂມນຊື່ເຣໂຣໂບອາມ. ລູກຊາຍຂອງເຣໂຣໂບອາມຄື ອາບີຢາ. ລູກຊາຍຂອງອາບີຢາຄືອາຊາ. ລູກຊາຍຂອງອາຊາຄື
ເຢໂຮຊາຟັດ.11ລູກຊາຍຂອງເຢໂຮຊາຟັດຄື ໂຢຣາມ. ລູກຂອງໂຢຣາມຄື ອາຮາຊີຢາ. ລູກຊາຍຂອງອາຮາຊີຢາຄື ໂຢອາດ.
12ລູກຊາຍຂອງໂຢອາດຄື ອາມາຊີຢາ. ລູກຊາຍຂອງອາມາຊີຢາຄື ອຸດຊີຢາ. ລູກຊາຍຂອງອຸດຊີຢາຄື ໂຢທາມ.
13ລູກຊາຍຂອງໂຢທາມຄື ອາຮາດ. ລູກຊາຍຂອງອາຮາດຄື ເຮເຊກີຢາ. ລູກຊາຍຂອງເຮເຊກີຢາຄື ມານາເຊ.14ລູກຊາຍຂອງມານາເຊຄື
ອາໂມນ. ລູກຊາຍຂອງອາໂມນຄື ໂຢສີຢາ.
15ລູກຊາຍຂອງໂຢສີຢາຄື ໂຢຮານານລູກຊາຍຫົວປີ, ຜູ້ທີສອງຄື ເຢໂຮຢາກີມ, ຜູ້ທີສາມຄື ເຊເດກີຢາ, ແລະ ຜູ້ທີສີ່ຄື ຊີວລູມ.
16ລູກຊາຍຂອງເຢໂຮຢາກີມຄື ເຢໂຮຢາກີນ ແລະ ເຊເດກີຢາ.
17ລູກຊາຍຂອງເຢໂຮຢາກີນຜູ້ຕົກເປັນຊະເລີຍຄື ເຊອານຕີເອນ,18ມັນຄີຣາມ, ເປດາຢາ, ເຊນັດຊາ, ເຢກາມີຢາ, ໂຮຊາມາ, ແລະ ເນດາບີຢາ.
19ລູກຊາຍຂອງເປດາຢາຄື ເຊຣູບາເບນ ແລະ ຊີເມອີ. ລູກຊາຍຂອງເຊຣູບາເບນຄື ເມຊຸນລຳ ແລະ ຮານານີຢາ; ນ້ອງສາວຂອງລາວຄືເຊໂລມິດ.
20ລູກຊາຍອີກຫ້າຄົນຄື ຮາຊູບາ, ໂອເຮນ, ເບເຣກີຢາ, ຮາສາດີຢາ, ແລະ ຢູຊັບເຮເຊັດ.21ລູກຊາຍຂອງຂອງຮານານີຢາຄື ເປລາຕີຢາ ແລະ
ເຢຊາຢາ. ລູກຊາຍຂອງເຂົາຄື ເຣຟາຢາ, ແລະ ລູກຫລານຕໍ່ໄປຄື ອານານ, ໂອບາດີຢາ, ແລະ ເຊການີອາ.
22ລູກຊາຍຂອງເຊການີອາຊື່ວ່າ ເຊມາຢາ. ລູກຊາຍຂອງເຊມາຢາຊື່ວ່າ ຮັດຕຸຊະ, ອີກາລ, ບາຣີຢາ, ເນອາຣີຢາ, ແລະຊາຟາ.
23ລູກຊາຍຂອງເນອາຣີຢາຊື່ວ່າ ເອລີໂອນາຍ, ຮີຊະກີຢາ ແລະອັດຊະຣີກາມ ສາມຄົນນຳກັນ.24ລູກຊາຍຂອງເອລີໂອນາຍຊື່ວ່າ ໂຮດາວີຢາ,
ເອລີຢາຊິບ, ເປລາຢາ, ອັກກຸບ, ໂຢຮານານ, ເດລາຢາ, ແລະ ອານານີ ມີເຈັດຄົນນຳກັນ.

 generated on Tue Jun 17 19:01:42 2025

# 4

[1]ເຊື້ອສາຍຂອງຢູດາຊື່ວ່າ ເປເຣັດ, ເຮດຊະໂຣນ, ການມີ, ຮູເຣ ແລະ ໂຊບານ.[2]ໂຊບານເປັນບິດາຂອງເຣອາຢາ.
ເຣອາຢາເປັນບິດາຂອງຢາຮາດ. ຢາຮາດເປັນບິດາຂອງອາຮຸມາຍ ແລະລາຮາດ. ຄົນເຫລົ່ານີ້ເປັນບັນພະບຸຣຸດຂອງຕະກູນຊາວໂຊຣາດ.

[3]ພວກນີ້ແມ່ນບັນພະບຸຣຸດຂອງຕະກູນຕ່າງໆໃນເມືອງເອຕາມຄື ເຢດຊະເຣເອນ, ອີຊະມາ, ແລະ ອີດບັດ.
ນ້ອງສາວຂອງພວກເຂົາຊື່ຮັດເຊເລເລນໂປນີ.[4]ເປນູເອນເປັນບັນພະບຸຣຸດຂອງຕະກູນຕ່າງໆໃນເມືອງເກໂດ. ເອເຊຜູ້ເປັນຕົ້ນຕະກູນຂອງຮູຊາ.
ຄົນເຫລົ່ານີ້ແມ່ນເຊື້ອສາຍຂອງຮູເຣ, ລູກຫົວປີຂອງເອຟຣາທາ ແລະ ຕົ້ນຕະກູນຂອງເບັດເລເຮັມ.
[5]ອາຊາຮູຜໍ່ຂອງເຕໂກ ມີເມຍສອງຄົນຄື ເຮລາ ແລະ ນະອາ ຣາ.[6]ນະອາຣາເກີດອາຮູດຊໍາ, ເຮເຟ, ເຕເມນີ ແລະຮາຮັດຊະຕາຣີໃຫ້ແກ່ເພິ່ນ.
ຄົນເຫລົ່ານີ້ເປັນລູກຊາຍຂອງນະອາຣາ.[7]ລູກຊາຍຂອງເຮລາຊື່ວ່າເຊເຣັດ, ອີດຊະຮາ ແລະເອທະນັນ,[8]ແລະ ໂຄເຊມີລູກຊາຍຊື່ ອານຸບ ແລະ
ໂຊເບບາ ແລະ ບັນດາຕະກູນທີ່ສືບເຊື້ອສາຍຂອງອາຮາລະເຮນຊຶ່ງເປັນລູກຊາຍຮາຣຸມ.
[9]ຢາເບດເປັນຜູ້ທີ່ມີກຽຕກວ່າພີ່ນ້ອງທັງຫລາຍຂອງລາວ. ແມ່ຂອງລາວເອີ້ນຊື່ລາວວ່າ ຢາເບດ. ນາງກ່າວວ່າ
“ເພາະຂ້ອຍໄດ້ເກີດລາວດ້ວຍຄວາມເຈັບປວດ.”[10]ຢາເບດໄດ້ອ້ອນວອນອອກນາມຊື່ພຣະເຈົ້າຂອງອິສະຣາເອນ ແລະກ່າວວ່າ,
“ຖ້າພຽງແຕ່ພຣະອົງໄດ້ຊົງອວຍພຣະພອນຂ້າພຣະອົງໃຫ້ບໍຣິບູນ ແລະ ຂະຫຍາຍເຂດແດນຂອງຂ້າພຣະອົງໃຫ້ກວ້າງອອກໄປ ແລະ
ຂໍພຣະຫັດຂອງພຣະອົງສະຖິດຢູ່ກັບຂ້າພຣະອົງ. ແລະ ເມື່ອຂໍພຣະອົງໄດ້ຮັກສາຂ້າພຣະອົງໃຫ້ພົ້ນຈາກຄວາມຊົ່ວຮ້າຍ
ເພື່ອບໍ່ໃຫ້ຂ້າພຣະອົງມີຄວາມເຈັບປວດ!” ແລະ ພຣະເຈົ້າໄດ້ປຣະທານຕາມທີ່ລາວທູນຂໍ.
[11]ເກລຸບນ້ອງຂອງຊູຮາເປັນບິດາຂອງເມຮີ ຜູ້ເປັນບິດາຂອງເອຊະໂຕນ.[12]ເອຊະໂຕນເປັນບິດາເບັດ ຣາຟາ, ປາເສອາ, ແລະ ເຕຮິນນາ
ຜູ້ໄດ້ເລີ່ມຕົ້ນເມືອງນາຮາດ ຄົນເຫລົ່ານີ້ໄດ້ອາໄສຢູ່ເຣກາ.
[13]ລູກຊາຍຂອງເກນັດຊື່ ໂອດນີເອນ ແລະ ເສຣາຢາ. ລູກຊາຍຂອງໂອດນີເອນຄື ຮາທັດ ແລະ ເມໂອໂນທາຍ.
[14]ເມໂອໂນທາຍເປັນບິດາຂອງໂອຟຣາ ແລະ ເສຣາຢາເປັນບິດາໂຢອາບຜູ້ເປັນບິດາ, ຜູ້ຊຶ່ງເປັນຕົ້ນຕະກູນເກຫາລາຊິມ, ພວກເຂົາເປັນຊ່າງສີມື.
[15]ລູກຊາຍຂອງກາເລັບຜູ້ເປັນລູກຊາຍເຢຟຸນເນຄື ອີຣູ, ເອລາ, ແລະ ນາອາມ. ລູກຊາຍຂອງເອລາຄື ເກນັດ.[16]ລູກຊາຍຂອງເຢຮັນເລເລນຄື ຊີເຟ,
ຊີຟາ, ຕີເຣຍ ແລະ ອາສາເຣນ.
[17-18]ລູກຊາຍຂອງເອັດຊະຣາຄື ເຢເທ, ເມເຣດ, ເອເຟ, ແລະ ຢາໂລນ. ເມຍຄົນເອຢິບຂອງເມເຣດໄດ້ເກີດມີຣີອາມ, ຊາມມາຍ, ແລະ ອີຊະບາ,
ຜູ້ເປັນພໍ່ຂອງເອຊະເຕໂມວ. ຄົນເຫລົ່ານີ້ແມ່ນລູກຊາຍຂອງບິທີຢາລູກສາວຂອງຟາຣາໂອຜູ້ທີ່ເມເຣດໄດ້ເອົາມາເປັນເມຍ.
ເມຍຂອງເພິ່ນຄົນຢູດາໄດ້ເກີດເຢເຣັດ, ພໍ່ຂອງເກໂດເຣ; ເຮເບພໍ່ຂອງໂສໂກ ແລະ ເຢກູທີເອນ, ພໍ່ຂອງຊາໂນອາ.
[19]ລູກຊາຍທັງສອງເມຍຂອງເພິ່ນຊື່ໂຮດີຢານ້ອງສາວຂອງນາຮາມເປັນພໍ່ຂອງເກອີລາຊາວການມີ. ອີກຄົນຫນຶ່ງຄື
ເອຊະເຕໂມວຜູ້ເປັນຊາວມາອາກາ.[20]ລູກຊາຍຂອງຊີໂມນຊື່ ອໍາໂນນ, ຣິນນາ, ເບັນ ຮານັນ, ແລະ ຕີໂລນ. ລູກຊາຍຂອງ ອີຊີ ມີຊື່ ໂຊເຮດ ແລະ
ເບັນໂຊເຮັດ.
[21]ລູກຊາຍຂອງເຊລາຜູ້ເປັນລູກຂອງຢູດາຊື່ວ່າ ເອຣະ ພໍ່ຂອງເລກາ, ລາອາດາພໍ່ຂອງມາເຣຊາ ແລະ
ບັນດາຄອບຄົວແຫ່ງເຊື້ອສາຍຂອງພວກເຂົາທີ່ເຮັດຜ້າປ່ານເນື້ອລະອຽດແຫ່ງຄອບຄົວເບັດອາຊະເບອາ,[22]ໂຢກີມ, ປະຊາຊົນເມືອງໂກເຊບາ
ແລະ ໂຢອາດ ແລະ ສາຣາບ, ຜູ້ມີຊັບສິນໃນປະເທດໂມອາບ, ແລະ ໄດ້ກັບມາຍັງເມືອງເບັດເລເຮັມ.
(ຂໍ້ມູນນີ້ເປັນເລື່ອງຕັ້ງແຕ່ບູຮານນະການ.)[23]ຄົນເຫລົ່ານີ້ເປັນຊ່າງປັ້ນຫມໍ້ດິນ ພວກເຂົາເປັນຊາວເມືອງເນຕາຢິມ ແລະ ເກເດຣາ ຢູ່ໃນບ່ອນນັ້ນ
ພວກເຂົາອາໄສຢູ່ໃກ້ກັບກະສັດ ຈຶ່ງໄດ້ເຮັດວຽກໃຫ້ກັບກະສັດ.
[24]ເຊື້ອສາຍຂອງຊີເມໂອນຊື່ ເນມູເອນ, ຢາມິນ, ຢາຣິບ, ເຊຣາ ແລະ ຊາອູນ.[25]ລູກຊາຍຂອງຊາອູນຊື່ຊານລູມ, ລູກຊາຍຂອງຊານລູມຊື່ມິບສາມ,
ແລະ ລູກຊາຍຂອງມິບສາມຊື່ມິຊະມາ.[26]ເຊື້ອສາຍຂອງມິຊະມາຊື່ ຮາມມູເອນ ລູກຊາຍຂອງເຂົາ, ຊັກເກີຫລານຊາຍຂອງເຂົາ, ແລະ
ຊີເມອີເຫລນຊາຍຂອງເຂົາ.
[27]ຊີເມອີມີລູກຊາຍສິບຫົກຄົນ ແລະ ລູກສາວຫົກຄົນ. ພີ່ນ້ອງຂອງຊີເມອີມີລູກຊາຍບໍ່ຫລາຍຄົນ,
ດັ່ງນັ້ນຄອບຄົວຂອງພວກເຂົາກໍບໍ່ໄດ້ເພີ່ມທະວີຫລາຍຂຶ້ນເຫມືອນກັບພວກລູກຫລານຢູດາ.[28]ພວກເຂົາອາໄສຢູ່ໃນເມືອງເບເອເຊບາ,
ເມືອງໂມລາດາ, ແລະ ເມືອງຮາຊາຊູອານ.
[29]ພວກເຂົາອາໄສຢູ່ເມືອງບິນຮາ, ເມືອງເອເຊັມ, ເມືອງໂຕລາດ,[30]ເບທູເອັນ, ເມືອງໂຮມາ, ເມືອງຊິກລັກ,[31]ເມືອງເບັດມັກກາໂບດ, ເມືອງຮາຊາ
ສູສີມ, ເມືອງເບັດບີຣີ, ແລະທີ່ເມືອງຊະອາຣາຢິມ. ບັນດາເມືອງເຫລົ່ານີ້ເປັນຫົວເມືອງຂອງພວກເຂົາຈົນຮອດກະສັດດາວິດຂຶ້ນປົກຄອງ.
[32]ບັນດາບ້ານຂອງພວກເຂົາຫ້າຫມູ່ບ້ານຊື່ວ່າ ເອຕາມ, ອາອີນ, ຣິມໂມນ, ໂຕເກນ, ແລະ ອາຊານ,
[33]ລວມກັບບັນດາບ້ານທັງຫລາຍອ້ອມຮອບເມືອງເຫລົ່ານີ້ໄກໄປຈົນຮອດເມືອງບາອານ. ບ່ອນເຫລົ່ານີ້ ເປັນບ່ອນຢູ່ອາໄສຂອງພວກເຂົາ, ແລະ
ມີບັນຊີສໍາມະໂນຄົວເຊື້ອສາຍຂອງພວກເຂົາ.
[34]ຕະກູນຜູ້ນໍາທັງຫລາຍຄື ເມໂຊບັບ, ຢາມເລກ, ໂຢຊາລູກຊາຍອາມາຊີຢາ,[35]ໂຢເອັນ, ເຢຮູລູກຊາຍຂອງໂຢຊີບີອາ
ເປັນລູກຊາຍຂອງເສຣາຢາເປັນລູກຊາຍ ຂອງອາຊີເອນ,[36]ເອລີໂອນາຍ, ຢາອາໂກບາ, ເຢໂຊຮາຢາ, ອາສາຢາ, ອາດີເອນ, ເຢສີມີເອນ,
ເບນາຢາ,[37]ແລະ ຊີຊາລູກຊາຍຊິບຟີ, ຊິບຟີເປັນລູກຊາຍອັນໂລນ, ອັນໂລນເປັນລູກຊາຍເຢດາຢາ, ເປັນລູກຊາຍຂອງຊິມຣີ,
ເປັນລູກຊາຍເຊມາຢາ.[38]ບັນດາທ່ານທີ່ກ່າວຊື່ມານີ້ເປັນເຈົ້ານາຍໃນບັນດາຄອບຄົວທັງຫລາຍຂອງພວກເຂົາ ແລະ
ຄອບຄົວບັນພະບຸຣຸດຂອງພວກເຂົາກໍເພີ່ມທະວີຂຶ້ນຢ່າງຫລວງຫລາຍ.
[39]ພວກເຂົາໄດ້ເດີນທາງໄປຮອດທາງເຂົ້າຂອງເມືອງເກໂດເຣຈົນຮອດທາງທິດຕາເວັນອອກຂອງຮ່ອມພູເພື່ອຊອກຫາທົ່ງຫຍ້າໃຫ້ຝູງແກະຂອງພວກເຂົາ.
[40]ພວກເຂົາໄດ້ພົບທົ່ງຫຍ້າທີ່ຂຽວງາມອຸດົມດີ ແລະ ແຜ່ນດິນນັ້ນກໍກວ້າງຂວາງງຽບສະຫງົບ. ເປັນດິນທີ່ເກີດຜົນລະປູກຫລາຍ
ເພາະວ່າຊາວເມືອງທີ່ຢູ່ບ່ອນນັ້ນແຕ່ກ່ອນມາຈາກຄົນຮາມ.
[41]ແລ້ວຄົນເຫລົ່ານີ້ຊຶ່ງມີບັນຊີໃນສໍາມະໂນຄົວໄດ້ເຂົ້າມາໃນສະໄຫມຂອງເຮເຊກີຢາກະສັດແຫ່ງຢູດາ, ແລະ ໄດ້ໂຈມຕີເຕັນຂອງພວກເຂົາ
ພ້ອມທັງບ່ອນຢູ່ອາໄສທັງຫລາຍຂອງພວກເຂົາກັບຊາວເມອູນີມທີ່ຢູ່ໃນບ່ອນນັ້ນ. ພວກເຂົາໄດ້ກວາດລ້າງພວກເຂົາຈົນຫມົດກ້ຽງຈົນເຖິງທຸກມື້ນີ້
ແລ້ວກໍຕັ້ງພູມລໍາເນົາຢູ່ໃນບ່ອນອາໄສຂອງພວກເຂົາ ເພາະບ່ອນນັ້ນມີທົ່ງຫຍ້າໃຫ້ແກ່ຝູງສັດຂອງພວກເຂົາ.


generated on Tue Jun 17 19:01:42 2025

42ພວກເຂົາເຫລົ່ານັ້ນມີຄົນເຜົ່າຊີເມໂອນຫ້າຮ້ອຍຄົນພາກັນໄປທີ່ພູເຂົາເສອີ, ຮ່ວມກັບ ທ່ານເປລາຕີຢາ, ທ່ານເນອາຣີຢາ, ທ່ານເຣຟາຢາ, ແລະ
ທ່ານອຸດຊີເອນລູກຊາຍທັງຫລາຍຂອງອິຊີຊີງເປັນເຈົ້ານາຍຂອງພວກເຂົາ.
43ພວກເຂົາໄດ້ໂຈມຕີຊະນະຈຳພວກຄົນທີ່ເຫລືອຢູ່ຊຶ່ງຫນີລອດພົ້ນຈາກພວກອຳມາເລັກ ແລ້ວພວກເຂົາກໍຕັ້ງຖິ່ນຖານຢູ່ບ່ອນນັ້ນຈົນທຸກມື້ນີ້.

 generated on Tue Jun 17 19:01:42 2025

## 5

[1]ລູກຊາຍຂອງຣູເບັນຊຶ່ງເປັນລູກກົກຂອງອິສະຣາເອນ—ລາວເປັນລູກຫົວປີກໍຈິງ ແຕ່ຍ້ອນລາວໄດ້ເຮັດໃຫ້ບ່ອນນອນພໍ່ຂອງລາວມີມົນທິນ
ສິດທິລູກຫົວປີຂອງລາວ ຈຶ່ງຕົກຢູ່ກັບລູກຊາຍຂອງໂຢເຊັບຜູ້ເປັນລູກຊາຍອິສະຣາເອນ, ແຕ່ໂຢເຊັບ
ບໍ່ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍຕາມສິດທິລູກຫົວປີ.[2]ໂຢເຊັບເປັນຜູ້ທີ່ແຂງແຮງທີ່ສຸດໃນບັນດາພີ່ນ້ອງ ແລະ
ເຈົ້ານາຍອົງຫນຶ່ງກໍອອກມາຈາກພວກເຂົາແຕ່ວ່າສິດທິລູກກົກກໍເປັນຂອງໂຢເຊັບ—[3]ລູກກົກຂອງອິສະຣາເອນຊື່ວ່າ ຮາໂນກ, ປານລູ,
ເຮດຊະໂຣນ ແລະ ກາມີ.

[4]ລູກຊາຍຂອງໂຢເອນຄື ເຊມາຢາ. ລູກຊາຍຂອງເຊມາຢາຄື ໂຄກ. ລູກຊາຍຂອງໂຄກຄື ຊີເມອີ.[5]ລູກຊາຍຂອງຊີເມອີຊື່ມີກາ.
ລູກຊາຍຂອງມີກາຊື່ເຣອາຢາ. ລູກຊາຍຂອງເຣອາຢາຊື່ບາອານ.[6]ລູກຊາຍຂອງບາອານຊື່ເບເອຣາ ຜູ້ທີ່ຕິກລັດປີເລເສ
ກະສັດເມືອງອັດຊີເຣຍໄດ້ກວາດໄປເປັນທາດ. ເບເອຣາ ເພິ່ນເປັນເຈົ້ານາຍຂອງຄົນຣູເບັນ.
[7]ພວກພີ່ນ້ອງຂອງເບເອຣາຕາມຄອບຄົວທີ່ຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້ນັ້ນຄື ເຈົ້າເຢອີເອນລູກຊາຍກົກ, ເຊຄາຣີຢາ.
[8]ເບລາລູກຊາຍຂອງອາດຊາດ ລູກຊາຍເຊມາ ລູກຊາຍໂຢເອນ. ຜູ້ທີ່ອາໄສຢູ່ເມືອງອາໂຣເອ, ແລະໄກອອກໄປຮອດເມືອງເນໂບ ແລະ
ເມືອງບາອານເມໂອນ.[9]ຊຶ່ງຢູ່ຟາກທິດຕາເວັນອອກໄປເລີ່ມແຕ່ຖິ່ນກັນດານ ຊຶ່ງຂະຫຍາຍໄປເຖິງແມ່ນ້ຳເອຟຣາດ.
ເພາະຝູງສັດລ້ຽງຂອງເພິ່ນເພີ່ມທະວີຫລາຍຂຶ້ນໃນແຜ່ນດິນກີເລອາດ.
[10]ໃນຣາຊະການຂອງຊາອູນ, ເຜົ່າຣູເບັນເຮັດສົງຄາມຕໍ່ສູ້ກັບຄົນຮັກຣີ ແລະ ພວກນີ້ໄດ້ລົ້ມຕາຍດ້ວຍມືຂອງເພິ່ນ.
ພວກເຂົາອາໄສຢູ່ໃນເຕັນຂອງຄົນຮັກກີຕະຫລອດຮອດແຖບຕາເວັນອອກຂອງກີເລອາດ.
[11]ລູກຫລານຂອງຄາດໄດ້ອາໄສຢູ່ໃກ້ຄຽງພວກເຂົາ, ໃນແຜ່ນດິນບາຊານໄປຈົນຮອດເມືອງສາເລກາ.[12]ແລະ ຊາຟາມເປັນຜູ້ຮອງ, ຢານາຍ ແລະ
ຊາຟາດໃນບາຊານ.[13]ພີ່ນ້ອງຂອງພວກເຂົາ, ຕາມຄອບຄົວບັນພະບຸຣຸດຂອງພວກເຂົາຄື ມີກາເອນ, ເມຊຸນລຳ, ເຊບາ, ໂຢຣາຍ, ຢາການ, ຊີອາ
ແລະ ເອເບີ—ທັງຫມົດເຈັດຄົນນຳກັນ.
[14]ຄົນເຫລົ່ານີ້ເປັນລູກຂອງອາບີຮາຍ, ແລະ ອາບີຮາຍເປັນລູກຊາຍຮູຣີ. ຮູຣີຜູ້ເປັນລູກຊາຍຢາໂຣອາ. ຢາໂຣອາ ເປັນລູກຊາຍກີເລອາດ
ກີເລອາດເປັນລູກຊາຍມີກາເອນ. ມີກາເອັນ ເປັນລູກຊາຍເຢຊີຊາຍ. ເຢຊີຊາຍເປັນລູກຊາຍຢາໂດ. ຢາໂດຜູ້ເປັນລູກຊາຍບູເຊ.
[15]ອາຮີເປັນລູກຊາຍອັບດີເອນ, ເປັນລູກຊາຍກູນີ, ຜູ້ເປັນເຈົ້ານາຍໃນຄອບຄົວບັນພະບຸຣຸດຂອງພວກເຂົາ.
[16]ພວກເຂົາໄດ້ອາໄສຢູ່ໃນກີເລອາດ, ໃນບາຊານ ແລະຕາມຫົວເມືອງ, ແລະ ໃນເຂດທົ່ງຫຍ້າທັງຫມົດຂອງ
ແຂວງຊາໂຣນຈົນສຸດເຂດແດນຂອງພວກເຂົາ.
[17]ຄົນເຫລົ່ານີ້ທັງຫມົດໄດ້ຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້ໃນຣາຊະການຂອງໂຢທາມກະສັດແຫ່ງຢູດາ ແລະ
ໃນຣາຊະການຂອງເຢໂຣໂບອາມກະສັດແຫ່ງອິສະຣາເອນ.
[18]ພວກລູກຫລານຣູເບັນ, ຄົນຄາດ ແລະ ຕະກູນມານາເຊອີກເຄິ່ງຫນຶ່ງມີຄົນເກັ່ງກ້າທີ່ຖືໂລ, ດາບ ແລະ ມີຄວາມຊຳນານໃນການຍິງທະນູ
ໃນການເຮັດເສິກມີສີ່ຫມື່ນສີ່ພັນຄົນ ກຽມພ້ອມທີ່ຈະເຂົ້າສະຫນາມຮົບ.[19]ພວກເຂົາເຮັດເສິກກັບຄົນຮັກກີ, ເຢຕູເຣ, ນາຟີດ ແລະ ໂນດາບ.
[20]ພວກເຂົາໄດ້ຮັບຄວາມຊ່ວຍເຫລືອຈາກພຣະເຈົ້າໃນການຕໍ່ສູ້ກັບຄົນເຫລົ່ານັ້ນ. ດ້ວຍວິທີນີ້ຄົນຮັກຣີ ແລະ
ຄົນທັງຫລາຍທີ່ຢູ່ຝ່າຍພວກສັດຕຣູທຸກຄົນໄດ້ພ່າຍແພ້. ເພາະພວກອິສະຣາເອນຮ້ອງທູນຕໍ່ພຣະເຈົ້າໃນການສູ້ຮົບ ແລະ
ພຣະອົງໄດ້ປຣະທານຕາມຄຳທູນຂອງພວກເຂົາ, ເພາະພວກເຂົາໄວ້ວາງໃຈໃນພຣະອົງ.
[21]ພວກເຂົາໄດ້ກວດເອົາຝູງສັດຂອງຂ້າເສິກຄືອູດຫ້າຫມື່ນໂຕ, ແກະສອງແສນຫ້າຫມື່ນໂຕ, ລາສອງພັນ ແລະ ຄົນຫນຶ່ງແສນຄົນ.
[22]ເພາະພວກເຂົາໄດ້ລົ້ມຕາຍເສຍຫາຍຫລາຍດ້ວຍການເສິກໃນເທື່ອນັ້ນຊຶ່ງເປັນມາຈາກພຣະເຈົ້າ.
ພວກເຂົາອາໄສຢູ່ໃນສະຖານທີ່ຂອງພວກເຂົາຈົນຖືກກວາດໄປເປັນຊະເລີຍ.
[23]ຄົນຕະກູນມານາເຊເຄິ່ງຫນຶ່ງອາໄສຢູ່ໃນແຜ່ນດິນບາຊານໄກໄປເຖິງບາອານເຮີໂມນ ແລະ ເສນີ (ພູເຂົາເຮີໂມນ).
[24]ຕໍ່ໄປນີ້ເປັນຫົວຫນ້າຕະກູນບັນພະບຸຣຸດຂອງພວກເຂົາຄື: ເອເຟ, ອີຊີ, ເອລີເອນ, ອັດຊະຣີເອນ, ເຢເຣມີຢາ, ໂຮດາວີຢາ ແລະຢາດີເອນ.
ພວກເຂົາເປັນຄົນທີ່ແຂງແຮງ ແລະ ມີໃຈເກັ່ງກ້າ, ມີຊື່ສຽງດີ, ເປັນຫົວຫນ້າຄອບຄົວບັນພະບຸຣຸດຂອງ ພວກເຂົາ.
[25]ແຕ່ພວກເຂົາໄດ້ຕໍ່ສູ້ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ ແລະ
ໄດ້ນະມັດສະການບັນດາພະທັງຫລາຍຂອງຊົນຊາດທີ່ພຣະເຈົ້າໄດ້ທຳລາຍຕໍ່ຫນ້າພວກເຂົານັ້ນ.
[26]ພຣະເຈົ້າຂອງອິສະຣາເອນຈຶ່ງໄດ້ກະຕຸ້ນຈິດໃຈຂອງປູນ ກະສັດແຫ່ງອັດຊີເຣຍ (ເອີ້ນອີກຊື່ຫນຶ່ງວ່າ ຕິດລັດ ປີເລເສ, ກະສັດແຫ່ງອັດຊີເຣຍ).
ພະອົງໄດ້ກວາດເອົາຊາວຣູເບັນ, ຊາວຄາດ ແລະ ຕະກູນມານາເຊ ເຄິ່ງຫນຶ່ງ. ພຣະອົງນຳໄປເມືອງຮາລາ, ຮາໂບ, ຮາຣາ ແລະ
ແມ່ນ້ຳເມືອງໂກຊານ, ບ່ອນຊຶ່ງພວກເຂົາຍັງອາໄສຢູ່ຈົນເຖິງທຸກມື້ນີ້.


generated on Tue Jun 17 19:01:42 2025

6 1ລູກຊາຍຂອງເລວີຊື່ວ່າ ເກໂຊນ, ໂກຮາດ ແລະເມຣາຣີ 2ລູກຊາຍຂອງໂກຮາດຊື່ ອຳຣາມ, ອິຊະຮາ, ເຮັບໂຣນ ແລະອຸດຊີເອນ.
3ລູກຂອງອຳຣາມຊື່ ອາໂຣນ, ໂມເຊ ແລະ ນາງມີຣີອາມ. ລູກຊາຍອາໂຣນຊື່ ນາດາບ, ອາບີຮູ, ເອເລອາຊາ ແລະອີທາມາ.

4ເອເລອາຊາເປັນບິດາຂອງຟີເນຮາດ, ແລະ ຟີເນຮາດເປັນບິດາຂອງອາບີຊູອາ. 5ອາບີຊູອາເປັນບິດາຂອງບຸກກີ, ແລະ ບຸກກີເປັນບິດາຂອງອຸດຊີ.
6ອຸດຊີເປັນບິດາຂອງເຊຣາຮີຢາ, ແລະ ເຊຣາຮີຢາເປັນບິດາຂອງເມຣາໂຢດ.
7ເມຣາໂຢດເປັນບິດາຂອງອາມາຣີຢາ, ແລະ ອາມາຣີຢາເປັນບິດາຂອງອາຮີຕູບ. 8ອາຮີຕູບເປັນບິດາຂອງຊາໂດກ, ແລະ
ຊາໂດກເປັນບິດາຂອງອາຮີມາອາດ. 9ອາຮີມາອາດເປັນບິດາຂອງອາຊາຣີຢາ, ແລະ ອາຊາຣີຢາເປັນບິດາຂອງໂຢຮານານ.
10ໂຢຮານານເປັນບິດາຂອງອາຊາຣີຢາ, ຜູ້ທີ່ເຮັດໜ້າທີ່ປະໂລຫິດຢູ່ໃນພຣະວິຫານ ຊຶ່ງໂຊໂລໂມນໄດ້ສ້າງໃນນະຄອນເຢຣູຊາເລັມ. 11ແລະ
ອາມາຣີຢາເປັນບິດາຂອງອາຮີຕູບ. 12ອາຮີຕູບເປັນບິດາຂອງຊາໂດກ, ແລະ ຊາໂດກເປັນບິດາຂອງຊານລູມ.
13ຊານລູມເປັນບິດາຂອງຮິນກີຢາ ແລະ ຮິນກີຢາເປັນບິດາຂອງອາຊາຣີຢາ. 14ອາຊາຣີຢາເປັນບິດາຂອງເສຣາຢາ, ແລະ
ເສຣາຢາເປັນບິດາຂອງເຢໂຮຊາດັກ. 15ເຢໂຮຊາດັກຖືກນຳໄປຕອນທີ່ພຣະຜູ້ເປັນເຈົ້າໄດ້ໃຫ້ຢູດາ ແລະ ເຢຣູຊາເລັມຖືກກວາດໄປເປັນຊະເລີຍ
ດ້ວຍມືຂອງເນບູກາດເນັດຊາ.
16ລູກຊາຍຂອງເລວີຄື ເກໂຊມ, ໂກຮາດ ແລະ ເມຣາຣີ. 17ຕໍ່ໄປນີ້ແມ່ນຊື່ລູກຊາຍຂອເກໂຊມຄື ລິບນີ ແລະ ຊີເມອີ. 18ລູກຊາຍຂອງໂກຮາດຄື
ອຳຣາມ, ອິດຊະຮາ, ເຮັບໂຣນ ແລະອຸດຊີເອນ.
19ລູກຊາຍຂອງເມຣາຣີຊື່ວ່າ ມາລີ ແລະ ມູຊີ. ເຫລົ່ານີ້ແມ່ນຄອບຄົວຂອງຄົນເລວີຕາມເຊື້ອສາຍພໍ່ຂອງພວກເຂົາ. 20ລູກຊາຍຂອງເກໂຊມຄື ລິບນີ.
ລູກຊາຍຂອງລິບນີຄືຢາຮາດ. ລູກຊາຍຂອງຢາຮາດຄືຊິມມາ. 21ລູກຊາຍຂອງໂຢອາຄືຊິມມາຄືໂຢອາ. ລູກຊາຍຂອງໂຢອາຄືອິດໂດ.
ລູກຊາຍຂອງອິດໂດຄືເຊຣາ. ລູກຊາຍຂອງເຊຣາຄືເຢອາເທຣາຍ.
22ລູກຊາຍຂອງໂກຮາດຄື ອຳມີນາດາບ. ລູກຊາຍຂອງອຳມີນາດາບຄືໂກຣາ. ລູກຊາຍຂອງໂກຣາຄືອັດສີ. 23ລູກຊາຍຂອງອັດສີຄື ເອນການາ.
ລູກຊາຍຂອງເອນການາຄື ເອບີອາສັບ. ລູກຊາຍຂອງເອບີອາສັບຄືອັດສີ. 24ລູກຊາຍຂອງອັດສີຄືຕາຮາດ. ລູກຊາຍຂອງຕາຮາດຄືອຸຣີເອນ.
ລູກຊາຍຂອງອຸຣີເອນຄື ອຸດຊີຢາ. ລູກຊາຍຂອງອຸດຊີຢາຄື ຊາອູນ.
25ລູກຊາຍຂອງເອນການາຄື ອາມາສາຍ, ອາຮີໂມດ ແລະ ເອນການ. 26ລູກຊາຍຂອງເອຄານານຜູ້ທີ່ສອງຄື ໂຊຟາຍ.
ລູກຊາຍຂອງໂຊຟາຍຄືນາຮາດ. 27ລູກຊາຍຂອງນາຮາດຄືເອລີອາບ. ລູກຊາຍຂອງເອລີອາບຄື ເຢໂຣຮາມ. ລູກຊາຍຂອງເຢໂຣຮາມຄືເອນການ.
28ລູກຊາຍຂອງຊາມູເອນຄື ໂຢເອນເປັນລູກຫົວປີຂອງເພິ່ນ, ໂຢເອນ ແລະ ອາບີຢາລູກຄົນທີສອງ. 29ລູກຊາຍຂອງເມຣາຣີຄື ມາລີ.
ລູກຊາຍຂອງມາລີຄື ລິບນີ. ລູກຊາຍຂອງລິບນີຄື ຊີເມອີ. ລູກຊາຍຂອງຊີເມອີຄືອຸດຊາ. 30ລູກຊາຍຂອງອຸດຊາຄື ຊີເມອີ.
ລູກຊາຍຂອງຊີເມອີຄືຮັກກີຢາ. ລູກຊາຍຂອງຮັກກີຢາຄືອາສາຢາ.
31ຄົນເຫລົ່ານີ້ເປັນບຸກຄົນທີ່ດາວິດໄດ້ແຕ່ງຕັ້ງໃຫ້ເບິ່ງແຍງການຮ້ອງເພງໃນພຣະວິຫານຂອງພຣະຢາເວຕັ້ງແຕ່ຫີບຄຳຫມັ້ນສັນຍາໄດ້ມາຕັ້ງຢູ່ໃນບ່ອນນັ້ນ.
32ພວກເຂົາໄດ້ບົວລະບັດຢູ່ຕໍ່ໜ້າທີ່ພັກອາໄສໃນຫໍເຕັນແຫ່ງຊຸມນຸມ (ຫໍເຕັນສັກສິດ)
ດ້ວຍການຮ້ອງເພງຈົນໂຊໂລໂມນໄດ້ສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າໃນນະຄອນເຢຣູຊາເລັມ.
ພວກເຂົາໄດ້ປະຕິບັດໜ້າທີ່ຂອງພວກເຂົາຕາມຕຳແໜ່ງ.
33ຕໍ່ໄປນີ້ເປັນບຸກຄົນທີ່ປະຕິບັດງານຢູ່ພ້ອມກັບລູກຫລານຂອງພວກເຂົາຄື ພວກລູກຫລານໂກຮາດມີເຮມານນັກຮ້ອງ,
ນີ້ຄືພວກບັນພະບຸຣຸດຂອງພວກເຂົາທີ່ຈະກັບມາໃນເວລານັ້ນ. ຄືເຮມານຜູ້ເປັນລູກຊາຍໂຢເອນ, ໂຢເອນຜູ້ເປັນລູກຊາຍຊາມູເອນ.
34ຊາມູເອນເປັນລູກຊາຍເອນການາ, ເອນການາເປັນລູກຊາຍເຢໂຣຮາມ, ເຢໂຣຮາມເປັນລູກຊາຍເອລີເອນ, ເອລີເອນເປັນລູກຊາຍໂຕອາ.
35ໂຕອາເປັນລູກຊາຍຊູບ, ຊູບເປັນລູກຊາຍເອນການາ, ເອນການາເປັນລູກຊາຍມາຮາດ, ມາຮາດເປັນລູກຊາຍອາມາສາຍ,
ອາມາສາຍເປັນລູກຊາຍຂອງເອນການາ.
36ເອນການາເປັນລູກຊາຍຂອງໂຢເອນ, ໂຢເອນເປັນລູກຊາຍຂອງອາຊາຣີຢາ, ອາຊາຣີຢາເປັນລູກຊາຍເຊຟານີຢາ.
37ເຊຟານີຢາເປັນລູກຊາຍຕາຮາດ, ຕາຮາດເປັນລູກຊາຍອັດສີ, ອັດສີເປັນລູກຊາຍເອບີອາສັບ, ເອບີອາສັບເປັນລູກຊາຍໂກຣາ.
38ໂກຣາເປັນລູກຊາຍຂອງອິດສະຮາ, ອິດສະຮາເປັນລູກຊາຍຂອງໂຄຮາດ, ໂຄຮາດເປັນລູກຊາຍເລວີ, ເລວີເປັນລູກຊາຍອິສະຣາເອນ.
39ແລະອາສັບພີ່ນ້ອງຂອງພວກເຂົາ ຜູ້ຊຶ່ງຢືນຢູ່ຂ້າງຂວາມືຂອງພວກເຂົາ ຄືອາສັບລູກຊາຍເບເຣກີຢາຜູ້ເປັນລູກຊາຍຂອງຊີເມອາ.
40ຊີເມອາເປັນລູກຊາຍມີກາເອນ, ມີກາເອນເປັນລູກຊາຍບາອາເສຢາ, ບາອາເສຢາເປັນລູກຊາຍມັນກີຢາ. 41ມັນກີຢາຜູ້ເປັນລູກຊາຍເອທະນີ,
ເອທະນີເປັນລູກຊາຍເຊຣາ, ເຊຣາເປັນລູກຊາຍອາດາຢາ. 42ອາດາຢາຜູ້ເປັນລູກຊາຍເອທານ, ເອທານເປັນລູກຊາຍຊິມມາ,
ຊິມມາເປັນລູກຊາຍຊີເມອີ. 43ຊີເມອີຜູ້ເປັນລູກຊາຍຢາຮາດ, ຢາຮາດເປັນລູກຊາຍເກໂຊມ, ເກໂຊມເປັນລູກຊາຍເລວີ.
44ຢູ່ທີ່ຂ້າງຊ້າຍມືຂອງເຮມານມີເພື່ອຮ່ວມງານຂອງເຂົາຄືລູກຊາຍຂອງເມຣາຣີ. ພີ່ນ້ອງຂອງພວກເຂົາຄື ເອທານຜູ້ເປັນລູກຊາຍກີຊີ,
ກີຊີຜູ້ເປັນລູກຊາຍອັບດີ, ອັບດີຜູ້ເປັນລູກຊາຍມັນລຸກ. 45ມັນລຸກຜູ້ເປັນລູກຊາຍຮາຊາບີຢາ, ຮາຊາບີຢາຜູ້ເປັນລູກຊາຍອາມາຊີຢາ,
ອາມາຊີຢາຜູ້ເປັນລູກຊາຍຮິນກີຢາ. 46ຮິນກີຢາຜູ້ເປັນລູກຊາຍອາມຊີ, ອາມຊີຜູ້ເປັນລູກຊາຍບານີ, ບານີຜູ້ເປັນລູກຊາຍເຊເມ.
47ເຊເມຜູ້ເປັນລູກຊາຍມາລີ, ມາລີຜູ້ເປັນລູກຊາຍມູຊີ, ມູຊີຜູ້ເປັນລູກຊາຍເມຣາຣີ, ເມຣາຣີຜູ້ເປັນລູກຊາຍເລວີ.
48ຄົນເລວີພີ່ນ້ອງຂອງພວກເຂົາໄດ້ຮັບແຕ່ງຕັ້ງໃຫ້ປະຕິບັດງານທຸກຢ່າງໃນຫໍເຕັນແຫ່ງພຣະວິຫານຂອງພຣະເຈົ້າ.
49ອາໂຣນ ແລະ ພວກລູກຊາຍຂອງເພິ່ນໄດ້ຖວາຍເຄື່ອງບູຊາເທິງແທ່ນເຜົາເຄື່ອງບູຊາ; ແລະ ເທິງແທ່ນເຄື່ອງຫອມບູຊາ
ເພື່ອປະຕິບັດງານທັງຫມົດໃນບ່ອນບໍຣິສຸດທີ່ສຸດ ແລະ ເພື່ອໄຖ່ໂທດບາບຂອງຊາວອິສະຣາເອນ ຕາມບັນດາຖ້ອຍຄຳທີ່ໂມເຊ
ຜູ້ຮັບໃຊ້ຂອງພຣະເຈົ້າໄດ້ສັ່ງໄວ້.
50ຕໍ່ໄປນີ້ເປັນລູກຊາຍຂອງອາໂຣນຄື ເອເລອາຊາລູກຊາຍຂອງເອເລອາຊາຄືຟີເນຮາດ. ລູກຊາຍຂອງຟີເນຮາດຄືອາບີຊູອາ.
51ລູກຊາຍຂອງອາບີຊູອາຄືບຸກກີ. ລູກຊາຍຂອງບຸກກີຄືອຸດຊີ. ລູກຊາຍຂອງອຸດຊີຄືເຊຣາຮີຢາ. 52ລູກຊາຍຂອງເຊຣາຮີຢາຄືເມຣາໂຢດ.
ລູກຊາຍຂອງເມຣາໂຢດຄືອາມາຣີຢາ. ລູກຊາຍຂອງອາມາຣີຢາຄືອາຮີຕູບ. 53ລູກຊາຍຂອງຊາໂດກຄືອາຮີມາອາດ.
ລູກຊາຍຂອງຊາໂດກຄືຮີມາອາດ.


generated on Tue Jun 17 19:01:42 2025

[54]ຕໍ່ໄປນີ້ເປັນບ່ອນຢູ່ອາໄສຂອງພວກເຂົາຕາມພູມລຳເນົາໃນເຂດແດນຂອງພວກເຂົາຄື, ລູກຫລານຂອງອາໂຣນ, ຈາກຄອບຄົວຊາວໂກຮາດ
(ສະຫລາກທຳອິດຕົກຖືກພວກເຂົາ).[55]ພວກເຂົາໄດ້ຮັບເມືອງເຮັບໂຣນໃນແຜ່ນດິນຢູດາ ແລະ ທົ່ງຫຍ້າຊຶ່ງຢູ່ອ້ອມຮອບນັ້ນ,[56]ແຕ່ວ່າທົ່ງນາ ແລະ
ຊົນນະບົດຂອງເມືອງນັ້ນ ພວກເຂົາໄດ້ຍົກໃຫ້ແກ່ກາເລັບລູກຊາຍເຢຟຸນເນ.
[57]ພວກເຂົາໄດ້ມອບເມືອງຕ່າງແຫ່ງຢູດາແກ່ລູກຫລານຂອງອາໂຣນຄື: (ເມືອງເຮັບໂຣນຊຶ່ງເປັນເມືອງລີ້ໄພ), ແລະ ເມືອງລິບນາ ແລະ ທົ່ງຫຍ້າ,
ເມືອງຢັດຕີ, ເມືອງເອຊະເຕໂມົວກັບທົ່ງຫຍ້າ.[58]ຮີເລນພ້ອມກັບທົ່ງຫຍ້າ, ແລະ ເດບີພ້ອມກັບທົ່ງຫຍ້າ.
[59]ພວກເຂົາໄດ້ໃຫ້ລູກຫລານຂອງອາໂລນຄື: ເມືອງອາຊານພ້ອມກັບທົ່ງຫຍ້າ ແລະ ເມືອງເບັດເຊເມັດພ້ອມກັບທົ່ງຫຍ້າ.
[60]ຈາກດິນແດນຕະກູນເບັນຢາມິນກໍມອບເມືອງເກບພ້ອມກັບທົ່ງຫຍ້າ, ອາເລເມັດພ້ອມກັບທົ່ງຫຍ້າ ແລະ ອານາໂທດພ້ອມກັບທົ່ງຫຍ້າ.
ຫົວເມືອງທັງຫມົດຂອງພວກເຂົາທຸກຄອບຄົວເປັນສິບສາມຫົວເມືອງດ້ວຍກັນ.
[61]ສ່ວນລູກຫລານໂກຮາດທີ່ຍັງເຫລືອຢູ່ນັ້ນໄດ້ຮັບສ່ວນມອບໂດຍສະຫລາກທີ່ໄດ້ຈາກຄອບຄົວຂອງຕະກູນເອຟຣາຢິມ, ຈາກຕະກູນດານ ແລະ
ຈາກຕະກູນມານາເຊເຄິ່ງຫນຶ່ງມີສິບຫົວເມືອງ.[62]ແລະ ມອບສິບສາມຫົວເມືອງຕະກູນອິດຊາຄາ, ຕະກູນອາເຊ, ຕະກູນນັບທາລີ ແລະ
ຈາກຕະກູນມານາເຊໃນບາຊານໃຫ້ແກ່ຄົນເກໂຊມຕາມຄອບຄົວຂອງພວກເຂົາ.
[63]ແລະມອບສິບສອງຫົວເມືອງຈາກຕະກູນຣູເບັນ, ຕະກູນຄາດ ແລະຕະກູນເຊບູລູນໃຫ້ແກ່ຄົນ ເມຣາຣີຕາມ ຄອບຄົວຂອງພວກເຂົາ.
[64]ລູກຫລານອິສະຣາເອນໄດ້ມອບຫົວເມືອງທັງຫລາຍພ້ອມກັບທົ່ງຫຍ້າໃຫ້ແກ່ຊາວເລວີ.
[65]ແລະລູກຫລານອິສະຣາເອນໄດ້ມອບດ້ວຍການຈັບສະຫລາກໂດຍທີ່ພວກເຂົາເອີ້ນຫົວເມືອງເຫລົ່ານັ້ນຈາກຕະກູນຢູດາ, ຕະກູນຊີເມໂອນ,
ແລະ ຕະກູນເບັນຢາມິນ.
[66]ສຳລັບບັນດາຄອບຄົວລູກຫລານໂກຮາດທີ່ເຫລືອຢູ່ມີຫົວເມືອງອານເປັນດິນແດນຂອງພວກເຂົາຈາກຕະກູນ ເອຟາຣາອິມ.
[67]ຊາວອິສະຣາເອນໄດ້ມອບເມືອງລີ້ພັຍຄື: ເມືອງເຊເຄັມພ້ອມກັບທົ່ງຫຍ້າໃນຖິ່ນພູເຂົາເອຟາຣາອິມ ແລະເມືອງເກເຊ ພ້ອມກັບທົ່ງຫຍ້າ,
[68]ເມືອງໂຢກພ້ອມກັບທົ່ງຫຍ້າ, ເມືອງເບັດໂຮໂຣນພ້ອມກັບທົ່ງຫຍ້າ,[69]ເມືອງອາຢາໂລນພ້ອມກັບທົ່ງຫຍ້າ, ແລະ
ເມືອງກັດຣິມໂມນພ້ອມກັບທົ່ງຫຍ້າ.
[70]ແລະມອບເມືອງຈາກຕະກູນມານາເຊເຄິ່ງຫນຶ່ງໃຫ້ກັບໂຄຮາດຄື ເມືອງອາເນພ້ອມກັບທົ່ງຫຍ້າ ແລະ ເມືອງບີເລອາມພ້ອມກັບທົ່ງຫຍ້າ.
ເມືອງເຫລົ່ານີ້ໄດ້ໃຫ້ແກ່ຄອບຄົວລູກຫລານໂກຮາດທີ່ຍັງເຫລືອຢູ່.
[71]ດິນແດນຂອງເຜົ່າມານາເຊເຄິ່ງຕະກູນທີ່ມອບໃຫ້ແກ່ລູກຫລານເກໂຊມຄື ເມືອງໂກລານໃນແຂວງບາຊານພ້ອມກັບທົ່ງຫຍ້າ ແລະ
ອາຊະຕະໂຣດພ້ອມກັບທົ່ງຫຍ້າ.[72]ຈາກຕະກູນເຜົ່າອິດຊາຄາ ໄດ້ໃຫ້ແກ່ເຊື້ອສາຍຂອງເກີໂຊນ ຄືເມືອງເກເດັດພ້ອມກັບທົ່ງຫຍ້າ,
ເມືອງດາເບຣາດພ້ອມກັບທົ່ງຫຍ້າ,[73]ເມືອງຣາໂມດພ້ອມກັບທົ່ງຫຍ້າ ແລະ ເມືອງອາເນມພ້ອມກັບທົ່ງຫຍ້າ.
[74]ອິດສະຄາໄດ້ຮັບຈາກຕະກູນອາເຊຄື ເມືອງມາຊັນພ້ອມກັບທົ່ງຫຍ້າ, ເມືອງອັບໂດນພ້ອມກັບທົ່ງຫຍ້າ,[75]ເມືອງຮູກໂກກພ້ອມກັບທົ່ງຫຍ້າ ແລະ
ເມືອງເຣໂຮບພ້ອມກັບທົ່ງຫຍ້າ[76]ພວກເຂົາໄດ້ຮັບຈາກເຜົ່ານັບທາລີຄື: ເມືອງເກເດັດໃນຄາລີເລພ້ອມກັບທົ່ງຫຍ້າ,
ເມືອງຮຳໂມນພ້ອມກັບທົ່ງຫຍ້າ, ເມືອງກີຣິອາດທາຢິມພ້ອມກັບທົ່ງຫຍ້າ.
[77]ສ່ວນຄົນເລວີ, ໃນຕະກູນເມຣາຣີທີ່ເຫລືອຢູ່ນັ້ນໄດ້ຮັບຈາກຕະກູນເຊບູລູນຄື: ເມືອງຣິມໂມໂນພ້ອມກັບທົ່ງຫຍ້າ ແລະ ເມືອງຕາໂບ
ພ້ອມກັບທົ່ງຫຍ້າ.[78-79]ພວກເຂົາໄດ້ຮັບຟາກແມ່ນ້ຳຢໍແດນເບື້ອງນັ້ນຖັດຈາກເຢຣີໂກທາງທິດຕາເວັນອອກຂອງແມ່ນ້ຳຈໍແດນເບື້ອງເຢຣີໂກ,
ແຄມຝາກຕາເວັນອອກຄື: ເມືອງເບເຊໃນຖິ່ນແຫ້ງແລ້ງກັນດານພ້ອມກັບທົ່ງຫຍ້າ, ເມືອງຢາຊາພ້ອມກັບທົ່ງຫຍ້າ,
ເມືອງເຄເດໂມດພ້ອມກັບທົ່ງຫຍ້າ, ແລະ ເມືອງເມຟະອາດພ້ອມກັບທົ່ງຫຍ້າ. ເມືອງເຫລົ່ານີ້ໄດ້ມອບໃຫ້ຕະກູນ ຣິອູເບນ.
[80]ຊາວເລວີໄດ້ຮັບຈາກຕະກູນຄາດຄື: ເມືອງຣາໂມດໃນແຂວງກີເລອາດພ້ອມກັບທົ່ງຫຍ້າ, ເມືອງມາຮານາຢິມພ້ອມກັບທົ່ງຫຍ້າ.
[81]ເມືອງເຮັດຊະໂບນພ້ອມກັບທົ່ງຫຍ້າ, ແລະ ເມືອງຢາເຊພ້ອມກັບທົ່ງຫຍ້າ.

 generated on Tue Jun 17 19:01:42 2025

7 [1]ລູກຊາຍຂອງອິດຊາຄາ ຄື ໂຕລາ, ປູອາ, ຢາຊຸບ, ແລະຊິມໂຣນສີ່ຄົນນຳກັນ.[2]ລູກຊາຍຂອງໂຕລາຄື ອຸດຊີ, ເຣຟາຢາ, ເຢຣີເອນ,
ຢາຣະມາຍ, ອິບສາມ ແລະ ເຊມູເອນ. ຫົວຫນ້າໃນຄອບຄົວບັນພະບູລຸດຂອງພວກເຂົາຄືໂຕລາ
ຜູ້ເປັນທະຫານທີ່ມີໃຈກ້າຫານຂອງເຊື້ອສາຍຂອງພວກເຂົາ
ແລະຈຳນວນຂອງຄົນເຫລົ່ານີ້ໃນສະໄຫມຂອງດາວິດເປັນສອງຫມື່ນສອງພັນຫົກຮ້ອຍຄົນ.[3]ລູກຊາຍຂອງອຸດຊີຄື ອິດຊະຣາຢາ.
ລູກຊາຍຂອງອິດຊະຣາຢາຄື ມີກາເອນ, ໂອບາດີຢາ, ໂຢເອນ ແລະອິດຊີຢາ ຫ້າຄົນນຳກັນ ທຸກຄົນເປັນຫົວຫນ້າ.

[4]ພ້ອມກັບຄົນເຫລົ່ານີ້ຕາມເຊື້ອສາຍຂອງພວກເຂົາ, ຕາມຄອບຄົວບັນພະບຸຣຸດຂອງພວກເຂົາມີກອງທະຫານທີ່ຈະເຮັດເສິກສາມຫມື່ນຫົກພັນຄົນ
ເພາະພວກເຂົາມີເມຍ ແລະ ລູກຊາຍຫລາຍຄົນ.
[5]ຍາດພີ່ນ້ອງຂອງພວກເຂົາຈາກບັນດາຄອບຄົວຂອງອິດຊາຄາເປັນຄົນທີ່ແຂງແຮງອົງອາດກ້າຫານ
ມີທັງຫມົດແປດຫມື່ນເຈັດພັນຄົນຕາມທີ່ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ.
[6]ລູກຊາຍຂອງເບັນຢາມິນຄື ເບລາ, ເບເຄ, ແລະ ເຢດີອາເອນ ສາມຄົນນຳກັນ.[7]ລູກຊາຍຂອງເບລາຄື ເອັດຊະໂບນ, ອຸດສີ, ອຸດຊີເອນ, ເຢຣີໂມດ
ແລະ ອີຣີ ຫ້າຄົນນຳກັນ. ເປັນຫົວຫນ້າຄອບຄົວຂອງບັນພະບຸຣຸດ, ຄົນທີ່ມີກຳລັງອົງອາດກ້າຫານ.
ຈຳນວນທີ່ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍຂອງພວກເຂົາມີສອງຫມື່ນສອງພັນສາມສິບສີ່ຄົນ,
ຕາມບັນຊີລາຍຊື່ທີ່ເປັນຂອງພວກບັນພະບຸຣຸດຂອງພວກເຂົາ.
[8]ລູກຊາຍຂອງເບເຄຄື ເຊມີຣາ, ໂຢອາດ, ເອລີເອເຊ, ເອລີໂອນາຍ, ອົມຣີ, ເຢເຣໂມດ, ອາບີຢາ, ອານາໂທດ ແລະອາເລເມດ.
ທັງຫມົດນີ້ເປັນລູກຊາຍຂອງເບເຄ.[9]ຕາມຈຳນວນເຊື້ອສາຍຂອງພວກເຂົາ, ຫົວຫນ້າຄອບຄົວມີສອງຫມື່ນສອງຮ້ອຍຄົນ ພ້ອມທີ່ຈະເຮັດເສິກ.
[10]ລູກຊາຍຂອງເຢດີອາເອນຄືບິນຮານ. ລູກຊາຍຂອງບິນຮານຄື ເຢອຸດ, ເບັນຢາມິນ, ເອຮຸດ, ເຄນາອານາ, ເຊທານ ຕາຊິດ, ແລະ ອາຮີຊາຮາ.
[11]ທັງຫມົດນີ້ເປັນລູກຊາຍຂອງເຢດີອາເອນ. ຕາມຫົວຫນ້າຄອບຄົວບັນພະບຸຣຸດຂອງພວກເຂົາ,
ຄົນທີ່ມີກຳລັງມີຄວາມອົງອາດກ້າຫານມີຫນຶ່ງຫມື່ນເຈັດພັນສອງຮ້ອຍຄົນ ພ້ອມທີ່ຈະເຮັດເສິກ.[12](ຊຸບປີມ ແລະຮຸບປີມ ເປັນລູກອີ, ແລະ ຮູຊິມ
ລູກຊາຍອາເຮ)
[13]ລູກຊາຍຂອງນັບທາລີຄື ຢາຊີເອນ, ກູນີ, ເຢດເຊ, ແລະຊານລູມ. ຄົນເຫລົ່ານີ້ແມ່ນລູກຫລານຂອງຂອງນາງບິນຮາ.
[14]ລູກຊາຍຂອງມານາເຊຄື ອາຊະຣີເອນ, ຊຶ່ງເມຍນ້ອຍຂອງເພິ່ນຊາວອາຣາມໄດ້ໃຫ້ກຳເນີດ. ນາງໄດ້ປະສູດລູກ ຊື່ ມາກີ,
ຜູ້ເປັນພໍ່ຂອງກິເລອາດ.[15]ມາກີໄດ້ເອົາເມຍຈາກພວກຮຸບປີມ ແລະ ຊຸບປີມມາເປັນເມຍ, ເອື້ອຍຂອງລາວຊື່ວ່າມາອາກາ.
ເຊື້ອສາຍອີກຄົນຫນຶ່ງຂອງມານາເຊຊື່ເຊໂລເຟຮາດ, ແລະ ເຊໂລເຟຮາດມີແຕ່ລູກສາວ.[16]ມາອາກາເມຍຂອງມາກີໄດ້ເກີດລູກຊາຍຄົນຫນຶ່ງ
ນາງເອີ້ນຊື່ວ່າ ເປເຣັດ. ນ້ອງຊາຍຂອງລາວ ຊື່ເຊເຣັດ ແລະ ລູກຊາຍຂອງລາວຊື່ ອຸລາມ ແລະ ຣາເກມ.
[17]ລູກຊາຍຂອງອຸລາມຊື່ ເບດານ. ຈຳນວນຄົນເຫລົ່ານີ້ແມ່ນເຊື້ອສາຍກິເລອາດຜູ້ເປັນລູກຊາຍມາກີລູກຂອງມານາເຊ.
[18]ນາງຮຳໂມເລເກັດນ້ອງສາວຂອງລາວກໍໃຫ້ກຳເນີດ ອິຊະໂຮດ, ອາບີເອເຊ ແລະ ມາລາ.[19]ລູກຊາຍຂອງເຊມີດາຄື, ອາຮີອານ ເຊເຄັມ, ລີຄີ,
ແລະ ອານີອາມ.
[20]ເຊື້ອສາຍຂອງເອຟຣາອິມມີດັ່ງຕໍ່ໄປນີ້: ລູກຊາຍຂອງເອຟຣາອິມຊື່ຊູເທລາ, ລູກຊາຍຂອງຊູເທລາຊື່ ເບເຣັດ. ລູກຊາຍຂອງເບເຣັດຊື່ຕາຮາດ.
ລູກຊາຍຂອງຕາຮາດຊື່ເອເລອາດາ. ລູກຊາຍຂອງເອເລອາດາຊື່ຕາຮາດ.[21]ລູກຊາຍຂອງຕາຮາດຄື ຊາບາດ. ລູກຊາຍຂອງຊາບາດຄືຊູເທລາ.
(ຊາວເມືອງກັດຜູ້ທີ່ໄດ້ກຳເນີດໃນເມືອງນັ້ນກໍໄດ້ຂ້າພວກເຂົາ ເພາະພວກເຂົາລົງມາປຸ້ນສັດລ້ຽງຂອງຊາວເມືອງກັດ.
[22]ເອຟຣາອິມພໍ່ຂອງພວກເຂົາໄດ້ໄວ້ທຸກຫລາຍມື້, ແລະ ພີ່ນ້ອງຂອງເພິ່ນກໍມາເລົ້າໂລມໃຈເພິ່ນ.
[23]ລາວໄດ້ຫລັບນອນກັບເມຍຂອງລາວ. ນາງກໍຕັ້ງທ້ອງ ແລະ ເກີດລູກຊາຍຄົນຫນຶ່ງ. ເອຟຣາອິມໄດ້ເອີ້ນຊື່ເດັກນັ້ນວ່າ ເບຣີອາ,
ເພາະລູກໄດ້ເກີດມາໃນເວລາມີເຫດຮ້າຍໃນຄອບຄົວຂອງຕົນ.[24]ລູກສາວຂອງເພິ່ນຊື່ເຊເອຣາ, ນາງໄດ້ກໍ່ສ້າງເບັດໂຮໂຣນເມືອງໃຕ້ ແລະ
ເມືອງເຫນືອ ແລະ ເມືອງອຸດເຊັນເຊເອຣາ.)
[25]ເອຟຣາອິມມີລູກຊາຍຊື່ເຣຟາ. ລູກຊາຍຂອງເຣຟາຄືເຣເຊັບ ລູກຊາຍຂອງເຣເຊັບຄືເຕລາ. ລູກຊາຍຂອງເຕລາ ຄືຕາຮານ.
[26]ລູກຊາຍຂອງຕາຮານຄືລາດານ. ລູກຊາຍຂອງລາດານຄືອຳມີຮຸດ. ລູກຊາຍຂອງອຳມີຮຸດຄືເອລີຊາມາ.[27]ລູກຊາຍຂອງເອລີຊາມາຄື ນູນ.
ລູກຊາຍຂອງນູນຄືໂຢຊວຍ.
[28]ທີ່ດິນທີ່ເປັນມໍຣະດົກ ແລະ ພູມລຳເນົາຂອງພວກເຂົາຄື ເບັດເອນ ພ້ອມກັບບັນດາຫົວເມືອງຕ່າງໆອ້ອມຮອບ.
ພວກເຂົາໄດ້ຂະຫຍາຍອານາເຂດໄປທາງດ້ານຕາເວັນອອກເຖິງເມືອງນາອາລັນ ແລະ ເກເຊ ດ້ານທິດຕາເວັນຕົກພ້ອມກັບບັນດາຫົວເມືອງ ແລະ
ເຊເຄັມພ້ອມກັບບັນດາຫົວເມືອງໄປເຖິງອັດຊາ ພ້ອມກັບບັນດາຫົວເມືອງຕ່າງໆ.[29]ເຂດແດນຂອງລູກຫລານມານາເຊ
ມີເມືອງເບັດເຊອານພ້ອມກັບບັນດາຫົວເມືອງ, ຕາອານັກພ້ອມກັບບັນດາຫົວເມືອງ, ເມກິດໂດພ້ອມກັບບັນດາຫົວເມືອງ,
ໂດເຣພ້ອມກັບບັນດາຫົວເມືອງ. ລູກຫລານໂຢເຊັບລູກຊາຍອິສະຣາເອນ ກໍໄດ້ອາໄສຢູ່ໃນບ່ອນເຫລົ່ານີ້.
[30]ລູກຊາຍຂອງອາເຊຄື ອິມນາ, ອີຊະວາ, ອີຊະວີ, ເບຣີອາ. ເສຣານ້ອງສາວຂອງພວກເຂົາ.[31]ລູກຊາຍ ເບລີອາຄື ເຮເບ ແລະ ມັນກີເອນ
ຜູ້ເປັນພໍ່ຂອງບີຊາອິດ.[32]ເຮເບເປັນບິດາຂອງຢາຟະເລດ, ໂຊເມ, ໂຮທາມ. ຊູອານ້ອງສາວຂອງພວກເຂົາ.
[33]ລູກຊາຍຂອງຢາຟະເລດ ຊື່ ປາສັກ, ບິມຮັນ, ແລະອາຊະວາດ. ຄົນເຫລົ່ານີ້ເປັນລູກຢາຟະເລດ.[34]ເຊເມເປັນນ້ອງຊາຍຂອງຢາເຟເລັດ,
ມີລູກຊາຍຄື ໂຣຮະກາ, ເຢຮຸບບາ, ແລະອາຣາມ.[35]ນ້ອງຊາຍຂອງເຊເມຄື ເຮເລັມມີລູກຊາຍ ຄື ໂຊຟາ, ອິມນາ, ເຊເລັດ, ແລະ ອາມານ.
[36]ລູກຊາຍຂອງໂຊຟາຄື ສູອາ, ຮາເນເຟ, ຊູອານ, ເບຣີ, ແລະ ອິມຣາ.[37]ເບເສ, ໂຮດ, ຊາມມາ, ຊິນຊາ, ອິດຮັນ ແລະເບເອຣາ.
[38]ລູກຊາຍຂອງເຢເທຄື ເຢຟຸນເນ, ປີຊະປາ, ແລະອາຣາ.
[39]ລູກຊາຍຂອງອຸນລານັ້ນຄື ອາຣາ, ຮານນີເອນ ແລະ ຣີຊີຢາ.[40]ທັງຫມົດເຫລົ່ານີ້ແມ່ນລູກຫລານຂອງອາເຊ.
ຫົວຫນ້າໃນຄອບຄົວບັນພະບຸຣຸດຂອງພວກເຂົາ, ເປັນຄົນແຂງແຮງອົງອາດກ້າຫານ, ແລະ ເປັນເຈົ້ານາຍໃຫຍ່ທ່າມກາງພວກຜູ້ນຳ.
ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍສຳລັບກອງທັບທະຫານໄດ້ສອງຫມື່ນຫົກພັນຄົນ, ໂດຍອີງໃສ່ຈຳນວນລາຍຊື່ທີ່ນັບໄດ້.


generated on Tue Jun 17 19:01:42 2025

8 [1]ເບັນຢາມິນໃຫ້ກຳເນີດເບລາລູກຫົວປີ, ອາຊະເບັນເປັນຄົນທີສອງ, ອາຮາຣາເປັນຄົນທີສາມ,[2]ໂນຮາຄົນທີສີ່, ຣາຟາຄົນທີຫ້າ.
[3]ລູກຊາຍຂອງເບລາຄື ອັດດາ, ເກຣະ, ອາບີຮູດ.[4]ອາບີຊູອາ, ນາອາມານ, ອາໂຮອາ,[5]ເກຣະ, ເຊຟູຟານ ແລະຮູຣາມ.

[6]ຕໍ່ໄປນີ້ເປັນເຊື້ອສາຍຂອງເອຮຸດ ຊຶ່ງພວກເຂົາເປັນຫົວຫນ້າບັນພະບຸຣຸດຂອງຊາວເມືອງເກບາ ແລະ
ພວກເຂົາໄດ້ຖືກກວາດໄປເປັນຊະເລີຍໃນເມືອງມານາຮາດ:[7]ນາອາມານ, ອາຮີຢາ ແລະ ເກຣະ. ພວກເຂົາໄດ້ຖືກກວາດໄປເປັນຊະເລີຍ ແລະ
ໄດ້ລູກຊື່ອຸດຊາ ແລະ ອາຮີຮູດ.
[8]ຊາຮາຣາຢິມໄດ້ລູກໃນດິນແດນໂມອາບ ຫລັງຈາກທີ່ລາວໄດ້ປະຮ້າງຮູຊິມ ແລະ ບາອາຣາເມຍຂອງລາວໄປແລ້ວ.
[9]ລາວໄດ້ລູກກັບນາງໂຮເດັດເມຍຂອງລາວຄື ໂຢບັບ, ຊິບີຢາ, ເມຊາ, ແລະ ມັນການ,[10]ເຢອູດ, ຊາເຄຍ ແລະ ມີຣະມາ.
ຄົນເຫລົ່ານີ້ເປັນລູກຊາຍຂອງຊາຮາຣາຢິມ ຊຶ່ງເປັນຫົວຫນ້າບັນພະບຸຣຸດຂອງພວກເຂົາ.[11]ລາວໄດ້ກາຍເປັນພໍ່ຂອງລູກຄືອາບີຕຸບ ແລະ
ເອນປາອານ ຊຶ່ງໄດ້ຈາກນາງຮູຊິມ.
[12]ລູກຊາຍຂອງເອນປາອານຄື ເອເບີ, ມີຊາມ ແລະ ເຊເມັດ (ຜູ້ນີ້ໄດ້ສ້າງເມືອງໂອໂນ ແລະ ເມືອງໂລດ ພ້ອມກັບຫມູ່ບ້ານອ້ອມຂ້າງ).
[13]ຍັງມີເບຣີອາ ແລະ ເຊມາ. ພວກເຂົາເປັນຫົວຫນ້າບັນພະບຸຣຸດຂອງຊາວເມືອງອາຢາໂລນ
ແມ່ນພວກນີ້ເອງທີ່ໄດ້ຂັບໄລ່ຊາວເມືອງກັດໃຫ້ຫນີໄປ.
[14]ອາຮີໂອ, ຊາຊັກ ແລະ ເຢເຣໂມດ.[15]ເຊບາດີຢາ, ອາຣັດ, ເອເດ,[16]ມີກາເອນ, ອີຊະປາ ແລະ ໂຢຮາ ຊຶ່ງເປັນລູກຊາຍຂອງເບຣີອາ.
[17-18]ເຊບາດີຢາ, ເມຊຸນລຳ, ຮິດຊະກີ, ເຮເບ, ອີຊະເມຣາຍ, ອິດຊະລີຢາ, ແລະ ໂຢບັບເປັນລູກຊາຍຂອງເອນປາອານ.
[19-21]ຢາກີມ, ຊິກຣີ, ຊັບດີ, ເອລີເອນາຍ, ຊິນເລທາຍ, ເອລີເອນ, ອາດາຢາ, ເບຣາຢາ, ແລະ ຊິມຣາດເປັນລູກຊາຍຂອງຊີເມອີ.
[22-25]ອີຊະປັນ, ເຮເບ, ເອລີເອນ, ອັບໂດນ, ຊິກຣີ, ຮານານ ຮານານີຢາ, ເອລາມ, ອັນໂທທີຢາ, ອີບເດຢາ, ແລະ
ເປນູເອນຜູ້ເປັນລູກຊາຍຂອງຊາຊັກ.
[26-27]ເຢໂຣຣາມມີລູກຊາຍດັ່ງນີ້: ເຊຮາຣີຢາ, ອາທາລີຢາຢາອາເຣຊີຢາ, ເອລີຢາ ແລະ ຊິກຣີ.
[28]ຄົນເຫລົ່ານີ້ເປັນຫົວຫນ້າບັນພະບຸຣຸດຂອງພວກເຂົາ ຕາມເຊື້ອສາຍຂອງພວກເຂົາເປັນຊັ້ນຫົວຫນ້າຜູ້ທີ່ໄດ້ອາໃສຢູ່ໃນນະຄອນເຢຣູຊາເລັມ.
[29]ພໍ່ຂອງກິເບໂອນ, ເຢອີເອັນ, ກໍໄດ້ອາໄສຢູ່ໃນເມືອງກິເບໂອນພ້ອມກັບເມຍຂອງເພິ່ນຊື່ມາອາກາ.[30]ລູກຊາຍຫົວປີຂອງເພິ່ນຊື່ອັບໂດນ ແລ້ວກໍມີ
ຊູເຣ, ກີເຊ, ບາອານ, ນາດາບ,[31]ເກໂດເຣ, ອາຮີໂອ, ແລະ ເຊເກ.
[32]ລູກຊາຍຂອງເຢອີເອນອີກຄົນຫນຶ່ງຄື ມິກໂລດ, ຊຶ່ງເປັນພໍ່ຂອງຊີເມອາ.
ພວກເຂົາໄດ້ອາໄສຢູ່ຟາກກົງກັນຂ້ວາມກັບຍາດພີ່ນ້ອງຂອງພວກເຂົາໃນນະຄອນເຢຣູຊາເລັມເຫມືອນກັນໂດຍທີ່ພວກເຂົາອາໄສຢູ່ກັບພວກພີ່ນ້ອງຂອງພວກເຂົາ.
[33]ເນ ເປັນບິດາຂອງກີເຊ. ກີເຊເປັນບິດາຂອງຊາອູນ. ຊາອູນເປັນບິດາຂອງໂຢນາທານ, ມັນກີຊົວ, ອາບີນາດາບ ແລະ ເອຊະບາອານ.
[34]ລູກຊາຍຂອງໂຢນາທານຄື ເມຣິບບາອານ ແລະ ເມຣິບບາອານເປັນບິດາຂອງມີກາ.
[35]ລູກຊາຍຂອງມີກາຄື ປີໂທນ, ເມເລັກ, ຕາເຣອາ ແລະອາຮາດ.[36]ອາຮາດ ເປັນບິດາຂອງເຢໂຮອາດດາ. ເຢໂຮອາດດາເປັນບິດາຂອງອາເລເມດ,
ອາຊະມາເວດ, ແລະ ຊິມຣີ. ຊິມຣີເປັນບິດາຂອງໂມຊາ.[37]ໂມຊາເປັນບິດາຂອງບີເນອາ. ລູກຊາຍຂອງບີເນອາຄື ຣາຟາ.
ລູກຊາຍຂອງລາຟາຄືເອເລອາສາ. ລູກຊາຍຂອງເອເລອາສາຄື ອາເຊນ.
[38]ອາເຊນມີລູກຊາຍຫົກຄົນ ແລະຕໍ່ໄປນີ້ແມ່ນຊື່ຂອງພວກເຂົາຄື ອັດຊະຣີການ, ໂບເກຣູ, ອິດຊະມາເອນ, ເຊອາຣີຢາ ໂອບາດີຢາ, ແລະ
ຮານານ. ທັງຫມົດນີ້ເປັນພວກລູກຊາຍຂອງອາເຊວ.[39]ພວກລູກຊາຍຂອງເອເຊັກນ້ອງຊາຍຂອງເພິ່ນຄື ອຸລາມລູກກົກ, ເຢອຸດຜູ້ທີສອງ ແລະ
ເອລີເຟເລັດ ເປັນຜູ້ທີສາມ.[40]ລູກຊາຍຂອງອຸລາມເປັນທະຫານທີ່ເກັ່ງກ້າ ແລະ ນັກຍິງທະນູທີ່ຊຳນານ.
ພວກເຂົາມີລູກຫລານຫລາຍກວ່າຫນຶ່ງຮ້ອຍຫ້າສິບຄົນ. ຄົນທັງຫມົດເຫລົ່ານີ້ເປັນລູກຫລານຂອງເບັນຢາມິນ.


generated on Tue Jun 17 19:01:42 2025

# 9

[1]ຊາວອິສະຣາເອນທັງຫມົດໄດ້ຂຶ້ນທະບຽນສຳມະໂນຄົວໄວ້ຕາມບັນດາເຊື້ອສາຍ ແລະ ເບິ່ງແມ໋
ທະບຽນສຳມະໂນນີ້ກໍຖືກບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງອິສະຣາເອນ. ຢູດາຜູ້ຖືກກວາດໄປເປັນຊະເລີຍໃນບາບີໂລນ
ເພາະການບາບຂອງພວກເຂົາ.[2]ພວກທຳອິດທີ່ເຂົ້າມາອາໄສໃນບັນດາຫົວເມືອງຕ່າງໆທີ່ເປັນກຳມະສິດຂອງພວກເຂົານັ້ນຄື ຊາວອິສະຣາເອນ,
ພວກປະໂລຫິດ, ພວກເລວີ ແລະ ພວກຜູ້ຮັບໃຊ້ປະຈຳພຣະວິຫານ.[3]ມີປະຊາຊົນບາງຄົນຈາກພວກຢູດາ, ພວກເບັນຢາມິນ, ພວກເອຟຣາອິມ
ແລະ ພວກມານາເຊໄດ້ອາໄສຢູ່ໃນນະຄອນເຢຣູຊາເລັມ.

[4]ບັນດາຜູ້ຕັ້ງຖິ່ນຖານລວມທັງອຸທາຍເປັນລູກຊາຍຂອງອຳມີຮຸດ, ເປັນລູກຊາຍຂອງອົມຣີ, ເປັນລູກຊາຍຂອງບານີຈາກເຊື້ອສາຍຂອງເປເຣັດ
ຜູ້ເປັນລູກຢູດາ.[5]ຈາກພວກຊີໂລຄື ອາສາຢາລູກຫົວປີ ແລະ ບັນດາລູກຊາຍຂອງລາວ.[6]ຈາກພວກເຊື້ອສາຍຂອງເຊຣາຄື ເຢອູເອນ.
ເຊື້ອສາຍຂອງລາວຫົກຮ້ອຍເກົ້າສິບຄົນ.
[7]ທ່າມກາງເຊື້ອສາຍຂອງເບັນຢາມິນຄື ສັນລູຜູ້ເປັນລູກຊາຍເມຊຸນລຳ, ເປັນລູກຊາຍໂຮດາວິຢາ, ເປັນລູກຊາຍ ຮັດເສນູອາ.
[8]ຍັງມີອິບເນຢາລູກຊາຍເຢໂຣຮາມ; ເອລາລູກຊາຍອຸດຊີ, ອຸດຊີເປັນລູກຊາຍມິກຣີ; ແລະ ເມຊຸນລຳລູກຊາຍເຊຟາຕີຢາ, ເປັນລູກຊາຍເຣອູເອນ,
ເປັນລູກຊາຍອິບນີຢາ.[9]ພີ່ນ້ອງທັງຫລາຍຂອງພວກເຂົາໄດ້ຖືກບັນທຶກໄວ້ໃນບັນຊີເຊື້ອສາຍນັບໄດ້ເກົ້າຮ້ອຍຫ້າສິບຫົກຄົນ.
ທັງຫມົດນີ້ເປັນຫົວຫນ້າຂອງບັນພະບຸຣຸດຕາມຄອບຄົວບັນພະບຸຣຸດຂອງພວກເຂົາ.
[10]ຈາກບັນດາປະໂລຫິດມີ ເຢດາຢາ, ເຢໂຮຢາຣິບ, ແລະ ຢາກິນ.[11]ຜູ້ເປັນລູກຊາຍຮິນກີຢາ, ເປັນລູກຊາຍເມຊຸນລຳ, ເປັນລູກຊາຍຊາໂດກ,
ເປັນລູກຊາຍເມຣາໂຢດ, ເປັນລູກຊາຍອາຮີຕຸບ ຊຶ່ງເປັນເຈົ້າຫນ້າທີ່ປົກຄອງຂອງພຣະວິຫານຂອງພຣະເຈົ້າ.
[12]ມີອາດາຢາຜູ້ເປັນລູກຊາຍເຢໂຣຮາມ, ເປັນລູກຊາຍປັດຊູ, ເປັນລູກຊາຍມັນກີຢາ. ຍັງມີມາອາໄສ, ເປັນລູກຊາຍອາດີເອນ,
ເປັນລູກຊາຍຢາເຊຣາຜູ້ເປັນລູກຊາຍເມຊຸນລຳ, ເປັນລູກຊາຍເມຊິນເລມິດ, ເປັນລູກຊາຍອິມເມ.
[13]ຍາດພີ່ນ້ອງທີ່ເປັນຫົວຫນ້າຄອບຄົວບັນພະບຸຣຸດຂອງພວກເຂົາລວມມີຫນຶ່ງພັນເຈັດຮ້ອຍຫົກສິບຄົນເປັນຄົນ.
ພວກເຂົາເປັນຜູ້ທີ່ເກັ່ງກ້າສາມາດຫລາຍ ເພື່ອເຮັດວຽກບົວລະບັດໃນພຣະວິຫານຂອງພຣະເຈົ້າ.
[14]ທ່າມກາງພວກເລວີ, ມີເຊມາຢາຜູ້ເປັນລູກຊາຍຮັດຊຸບ, ເປັນລູກຊາຍອັດຊະຣິການ, ເປັນລູກຊາຍຮາຊາບີຢາ ລູກຫລານຂອງເມຣາຣີ.
[15]ຍັງມີບັກບັກກາ, ເຮເຣັດ, ກາລັນ ແລະມັດຕານີຢາ ຜູ້ເປັນລູກຊາຍມີກາ, ເປັນລູກຊາຍຊິກຣີ, ເປັນລູກຊາຍ ອາສັບ.
[16]ຍັງມີໂອບາດີຢາຜູ້ເປັນລູກຊາຍເຊມາຢາ, ເປັນລູກຊາຍກາລັນ, ເປັນລູກຊາຍເຢດູທູນ; ແລະ ເບເຣກີຢາ, ຜູ້ເປັນລູກຊາຍອາຊາ,
ເປັນລູກຊາຍເອນການາ, ພວກທີ່ອາໄສຢູ່ໃນຊົນນະບົດຂອງຊາວເນໂຕຟາ.
[17]ພວກຜູ້ເຝົ້າປະຕູຄື ຊານລູມ, ອັກກຸບ, ຕັນໂມນ, ອາຮີມານ, ແລະ ພີ່ນ້ອງຂອງພວກເຂົາ ຊານລູມເປັນຫົວຫນ້າ.
[18]ແຕ່ກ່ອນພວກເຂົາເປັນຜູ້ເຝົ້າປະຕູຂອງກະສັດທາງດ້ານທິດຕາເວັນອອກສຳລັບຄ້າຍຂອງພວກລູກຫລານເລວີ.[19]ຊານລູມເປັນລູກຊາຍໂກເຣ,
ເປັນລູກຊາຍເອບີອາສັບ, ເປັນລູກຊາຍໂກຣາ, ພີ່ນ້ອງຂອງພວກເຂົາຈາກຄອບຄົວບັນພະບຸຣຸດຂອງພວກເຂົາຄື ຄົນໂກຣາ
ຊຶ່ງເປັນຜູ້ເບິ່ງແຍງວຽກງານໃນການບົວລະບັດ, ເປັນຜູ້ເຝົ້າຍາມປະຕູຫໍເຕັນ, ເຫມືອນກັບບັນພະບຸຣຸດຂອງພວກເຂົາ, ແລະ
ເປັນຜູ້ເບິ່ງແຍງຄ້າຍຂອງພຣະຢາເວ ແລະ ທາງເຂົ້າ.
[20]ຟີເນຮາດລູກຊາຍຂອງເອເລອາຊາເປັນຜູ້ປົກຄອງພວກເຂົາໃນຄາວກ່ອນ, ແລະພຣະຢາເວໄດ້ສະຖິດຢູ່ກັບພວກເຂົາ.
[21]ເຊຄາຣີຢາລູກຊາຍເມເຊເລມີຢາ ເປັນຜູ້ເຝົ້າທາງເຂົ້າປະຕູສູ່ທາງເຂົ້າພຣະວິຫານ, "ຫໍເຕັນແຫ່ງການຊຸມນຸມ."
[22]ພວກທີ່ຖືກເລືອກໃຫ້ເປັນຜູ້ເຝົ້າປະຕູນັ້ນມີສອງຮ້ອຍສິບສອງຄົນ.
ພວກເຂົາໄດ້ຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້ໃນເມືອງຕ່າງໆຂອງພວກເຂົາ. ກະສັດດາວິດ ແລະ
ຊາມູເອນຜູ້ທຳນວາຍໄດ້ສະຖາປະນາພວກເຂົາໄວ້ໃນຕຳແຫນ່ງຫນ້າທີ່ນັ້ນແລ້ວ.[23]ດັ່ງນັ້ນ ພວກເຂົາ ແລະ
ລູກຫລານຂອງພວກເຂົາຈຶ່ງເປັນຜູ້ເບິ່ງແຍງປະຕູທາງເຂົ້າພຣະວິຫານຂອງພຣະຢາເວ, ແລະ ເປັນຜູ້ເຝົ້າຍາມປະຕູພຣະວິຫານຂອງຫໍເຕັນ.
[24]ພວກຜູ້ເຝົ້າຍາມປະຕູກໍຢູ່ທັງສີ່ທິດຄື ທິດຕາເວັນອອກ, ທິດຕາເວັນຕົກ, ທິດເຫນືອ, ແລະ ທິດໃຕ້.
[25]ພີ່ນ້ອງຂອງພວກເຂົາ, ທີ່ຢູ່ໃນຫມູ່ບ້ານຂອງພວກເຂົານັ້ນ, ໄດ້ຫມຸນວຽນເຂົ້າມາເຮັດວຽກທຸກໆເຈັດມື້
ຕາມເວລາກຳນົດ[26]ເພາະສີ່ທ່ານທີ່ເປັນຜູ້ນຳໃນຫນ້າທີ່ການເຝົ້າຍາມ, ເປັນຊາວເລວີ, ມີຕຳແຫນ່ງເປັນຜູ້ເບິ່ງແຍງຫ້ອງ ແລະ
ຄັງຂອງພຣະວິຫານຂອງພຣະເຈົ້າ.[27]ພວກເຂົາໄດ້ເຝົ້າອ້ອມຮອບພຣະວິຫານຂອງພຣະເຈົ້າທັງຄືນ
ເພາະຫນ້າທີ່ເຝົ້າຮັກສາໄດ້ຕົກຢູ່ກັບພວກເພິ່ນ. ພວກເພິ່ນຖືກະແຈ ຊຶ່ງມີຫນ້າທີ່ໄຂປະຕູໃນທຸກເຊົ້າ.
[28]ບາງຄົນເປັນຄົນປະຈຳການເບິ່ງແຍງເຄື່ອງໃຊ້ໃນການບົວລະບັດພຣະວິຫານ; ເພາະວ່າຈະເບີກອອກໄປ ຫລື ຮັບເຂົ້າມາຕ້ອງນັບທຸກເທື່ອ.
[29]ບາງຄົນຖືກແຕ່ງຕັ້ງໃຫ້ເບິ່ງແຍງຮັກສາເຄື່ອງໃຊ້ທົ່ວໄປ ແລະ ເບິ່ງແຍງເຄື່ອງໃຊ້ຂອງສະຖານທີ່ບໍຣິສຸດທັງຫມົດ
ລວມທັງເບິ່ງແຍງແປ້ງເຂົ້າທີ່ລະອຽດ, ນ້ຳອະງຸ່ນ, ນ້ຳມັນ, ກຳຍານ, ແລະ ເຄື່ອງຫອມຕ່າງໆ.
[30]ບາງຄົນຊຶ່ງເປັນລູກຊາຍຂອງປະໂລຫິດກໍຕຽມເຄື່ອງຫອມຕ່າງໆປະສົມກັນເຮັດນ້ຳມັນຫອມ.[31]ມັດຕີທີຢາຄົນເລວີຄົນຫນຶ່ງ
ຜູ້ເປັນລູກຫົວປີຂອງຊານລູມຄົນໂກຣາ ເປັນຜູ້ປະຈຳການເຮັດເຂົ້າຈີ່ສຳລັບການຖວາຍ.[32]ພີ່ນ້ອງຂອງພວກເຂົາບາງຄົນຊຶ່ງເປັນຄົນໂກຮາດ,
ເປັນຜູ້ເບິ່ງແຍງເຂົ້າຈີ່ທີ່ຢູ່ຫນ້າພຣະພັກ ມີຫນ້າທີ່ຈັດຕຽມໃນທຸກໆວັນສະບາໂຕ.
[33]ຕໍ່ໄປນີ້ເປັນພວກນັກຮ້ອງທີ່ເປັນຫົວຫນ້າຂອງບັນພະບຸຣຸດພວກເລວີຜູ້ອາໄສຢູ່ໃນຫ້ອງໃນພຣະວິຫານໂດຍບໍ່ຕ້ອງເຮັດການບົວລະບັດຢ່າງອື່ນ
ເພາະພວກເຂົາຢູ່ເວນຍາມທັງກາງເວັນ ແລະກາງຄືນ.[34]ຄົນເຫລົ່ານີ້ແມ່ນບັນດາຫົວຫນ້າຂອງຄົນເລວີ
ຕາມເຊື້ອສາຍຂອງພວກເຂົາເປັນຫົວຫນ້າຊຶ່ງອາໄສຢູ່ທີ່ນະຄອນເຢຣູຊາເລັມ.
[35]ໃນເມືອງກິເບໂອນນັ້ນ ເຢອີເອນພໍ່ຂອງກິເບໂອນອາໄສຢູ່ ພ້ອມກັບເມຍຂອງເພິ່ນຊື່ມາອາກາ.[36]ລູກຊາຍກົກຂອງເພິ່ນຊື່ອັບໂດນ, ແລະ ຊູເຣ
ກີເຊ, ບາອານ, ເນ, ແລະ ນາດາບ,[37]ເກໂດເຣ, ອາຮີໂອ, ເຊຄາຣີຢາ ແລະ ມິກໂລດ.


generated on Tue Jun 17 19:01:42 2025

38ມີກໂລດໄດ້ລູກຊື່ ຊີເມອານ. ຄົນເຫລົ່ານີ້ໄດ້ອາໄສຢູ່ໃກ້ພວກພີ່ນ້ອງຂອງພວກເຂົາໃນນະຄອນເຢຣູຊາເລັມ. 39ເນເປັນບິດາຂອງກີເຊ,
ກີເຊເປັນບິດາຂອງຊາອູນ. ຊາອູນເປັນບິດາຂອງໂຢນາທານ, ມັນກີຊົວ, ອາບີນາດາບ ແລະ ເອຊະບາອານ.
40ລູກຊາຍຂອງໂຢນາທານຊື່ເມຣິບບາອານ. ເມຣິບບາອານເປັນບິດາຂອງມີກາ.
41ລູກຊາຍຂອງມີກາຄື ປີໂທນ, ເມເລັກ, ຕາເຣອາ ແລະອາຮາດ. 42ອາຮາດເປັນບິດາຂອງຢາຣາ. ຢາຣາເປັນບິດາຂອງອາເລເມດ, ອາຊະມາເວດ
ແລະ ຊິມຣີ. ຊິມຣີ ເປັນບິດາຂອງໂມຊາ. 43ໂມຊາເປັນບິດາຂອງບີເນອາ. ລູກຊາຍຂອງບີເນອາຄືເຣຟາຢາ. ລູກຊາຍຂອງເຣຟາຢາຄືເອເລອາສາ.
ລູກຊາຍຂອງເອເລອາສາຄື ອາເຊນ. 44ອາເຊນມີລູກຊາຍຫົກຄົນ ແລະຕໍ່ໄປນີ້ເປັນຊື່ຂອງພວກເຂົາຄື ອັດຊະຣີກາມ, ໂບເກຣູ, ອິດຊະມາເອນ,
ເຊອາຣີຢາ, ໂອບາດີຢາ, ແລະ ຮານານ. ຄົນເຫລົ່ານີ້ເປັນລູກຊາຍຂອງອາເຊນ.


generated on Tue Jun 17 19:01:42 2025

10 [1]ບັດນີ້ຄົນຟີລິສະຕິນໄດ້ສູ້ຮົບກັບຄົນອິສະຣາເອນ. ຄົນອິສະຣາເອນໄດ້ປົບຫນີຕໍ່ຫນ້າຄົນຟີລິສະຕິນ ແລະ
ໄດ້ລົ້ມຕາຍຢູ່ເທິງພູເຂົາກິນໂບອາ.[2]ພວກຟີລິສະຕິນໄດ້ໄລ່ທັນຊາອູນກັບພວກລູກຊາຍ. ຄົນຟີລິສະຕິນໄດ້ຂ້າໂຢນາທານ, ອາບີນາດາບ,
ແລະ ມັນກີຊົວລູກຊາຍຂອງຊາອູນ.[3]ການສູ້ຮົບຂອງຊາອູນດຸເດືອດຫລາຍ ແລະ ນັກຍິງທະນູໄດ້ມາເຖິງພະອົງ. ພະອົງບາດເຈັບສາຫັດດ້ວຍສີນີ
ຂອງນັກຍິງທະນູ.

[4]ຊາອູນສັ່ງຄົນທີ່ຖືອາວຸດຂອງພະອົງວ່າ “ຈົ່ງຖອດດາບອອກແທງເຮົາໃຫ້ຊອດເຖີດ. ຖ້າບໍ່ດັ່ງນັ້ນ,
ຢ້ານວ່າຄົນທີ່ບໍ່ໄດ້ຮັບພິທີຕັດເຫລົ່ານີ້ຈະເຂົ້າມາແທງເຮົາ ແລະ ປະຈານຂາຍຫນ້າເຮົາ.” ແຕ່ຜູ້ຖືອາວຸດບໍ່ຍອມເຮັດຕາມ ເພາະລາວຢ້ານຫລາຍ
ຊາອູນຈຶ່ງໄດ້ຖອດດາບຂອງພະອົງອອກ ແລະ ລົ້ມທັບປາຍດາບນັ້ນ.
[5]ເມື່ອຜູ້ຖືອາວຸດເຫັນວ່າຊາອູນສິ້ນພະຊົນແລ້ວ, ລາວກໍລົ້ມທັບດາບຂອງລາວຕາຍນໍາກັນ.[6]ດັ່ງນັ້ນ, ຊາອູນໄດ້ສິ້ນພະຊົນ,
ພ້ອມກັບລູກຊາຍທັງສາມຂອງພະອົງ, ແລະ ຄອບຄົວທັງຫມົດຂອງພະອົງກໍຕາຍໄປພ້ອມກັນ.
[7]ເມື່ອບັນດາຊາວອິສະຣາເອນທີ່ຢູ່ໃນຮ່ອມພູເຫັນວ່າກອງທັບປົບຫນີໄປ, ແລະ ຊາອູນພ້ອມລູກຊາຍຂອງພະອົງກໍສິ້ນພະຊົນແລ້ວ,
ພວກເຂົາກໍປະຖິ້ມບ້ານເມືອງຂອງພວກເຂົາ ແລະຫລົບຫນີໄປ. ພວກຟີລິສະຕິນກໍເຂົ້າມາອາໄສຢູ່ໃນບ່ອນນັ້ນ.[8]ຢູ່ມາໃນເຊົ້າມື້ໃຫມ່,
ເມື່ອຄົນຟີລິສະຕິນມາຖອດເອົາສິ່ງຂອງຈາກຄົນທີ່ຖືກຂ້າ, ພວກເຂົາກໍໄດ້ພົບສົບຂອງຊາອູນ ແລະ ລູກຊາຍທັງສາມຢູ່ເທິງພູເຂົາກິນໂບອາ.
[9]ພວກເຂົາກໍຖອດເອົາເຄື່ອງ ແລະ ເອົາຫົວພ້ອມກັບອາວຸດຂອງພະອົງໄປ. ພວກເຂົາໄດ້ສົ່ງຜູ້ສົ່ງຂ່າວໄປທົ່ວດິນແດນຟີລິສະຕິນ
ໃຫ້ນໍາຂ່າວດີໄປເຖິງຮູບເຄົາຣົບທັງຫລາຍ ແລະປະຊາຊົນຂອງພວກເຂົາ.
[10]ພວກເຂົາເອົາເຄື່ອງອາວຸດຂອງພະອົງໄປວາງໄວ້ໃນວິຫານຮູບເຄົາຣົບຂອງພວກເຂົາ, ແລະ
ເອົາເຫລັກຕະປູຕອກໃສ່ຫົວຂອງພະອົງຕິດໄວ້ໃນວິຫານຂອງພະດາໂກນ.
[11]ເມື່ອຄົນທັງຫລາຍໃນເມືອງຢາເບັດແຂວງກິເລອາດໄດ້ຍິນເລື່ອງທັງຫມົດທີ່ຄົນຟີລິສະຕິນໄດ້ເຮັດແກ່ຊາອູນ,
[12]ທະຫານທີ່ເກັ່ງກ້າທັງຫມົດກໍໄດ້ລຸກຂຶ້ນໄປເອົາສົບຂອງຊາອູນ ແລະ ຊາກສົບຂອງພວກລູກຊາຍຂອງພະອົງ ໂດຍນໍາມາໄວ້ທີ່ຢາເບັດ.
ພວກເຂົາໄດ້ຝັງກະດູກຂອງພວກເພິ່ນຢູ່ກ້ອງຕົ້ນໂອກໃນຢາເບັດ ແລະ ໄດ້ພາກັນອົດອາຫານເຈັດມື້.
[13]ດັ່ງນັ້ນຊາອູນໄດ້ຕາຍໃນຄວາມບາບທີ່ພະອົງໄດ້ເຮັດຕໍ່ພຣະຢາເວ. ພະອົງບໍ່ໄດ້ຮັກສາພຣະຄໍາຂອງພຣະຜູ້ເປັນເຈົ້າ, ແຕ່ວ່າ ອີກບັນຫາຫນຶ່ງ
ຍ້ອນພະອົງຊອກຫາການນໍາ ໂດຍໄປປຶກສາກັບຄົນເຂົ້າຊົງ.[14]ດັ່ງນັ້ນພຣະຢາເວຈຶ່ງໄດ້ສັ່ງຫານພະອົງ ແລະ
ໄດ້ຍົກຣາຊະອານາຈັກໃຫ້ແກ່ດາວິດລູກຊາຍຂອງເຢຊີ.


generated on Tue Jun 17 19:01:42 2025

# 11

[1]ແລ້ວຄົນອິສະຣາເອນທັງຫມົດກໍຊຸມນຸມກັນເພື່ອເຂົ້າເຝົ້າດາວິດທີ່ເມືອງເຮັບໂຣນທູນວ່າ “ເບິ່ງແມ໋, ຂ້າພະອົງທັງຫລາຍເປັນກະດູກ ແລະ
ເນື້ອຫນັງຂອງພະອົງ.[2]ໃນຄາວກ່ອນ, ເມື່ອຊາອູນເປັນກະສັດ ພະອົງໄດ້ເປັນຜູ້ນຳທະຫານອິສະຣາເອນ. ພຣະຢາເວ
ພຣະເຈົ້າຂອງພະອົງກ່າວແກ່ພະອົງວ່າ ‘ເຈົ້າຈະລ້ຽງດູອິສະຣາເອນປະຊາຊົນຂອງເຮົາ, ແລະ
ເຈົ້າຈະເປັນເຈົ້ານາຍປົກຄອງອິສະຣາເອນປະຊາຊົນຂອງເຮົາ.’”[3]ດັ່ງນັ້ນພວກຜູ້ໃຫຍ່ທັງຫມົດຂອງຄົນອິສະຣາເອນກໍໄດ້ເຂົ້າເຝົ້າກະສັດທີ່ເມືອງເຮັບໂຣນ,
ແລະ ດາວິດໄດ້ເຮັດຄຳຫມັ້ນສັນຍາກັບພວກເຂົາທີ່ເມືອງເຮັບໂຣນຕໍ່ພຣະພັກພຣະຢາເວ.
ພວກເຂົາກໍເຈີມດາວິດໃຫ້ເປັນກະສັດປົກຄອງອິສະຣາເອນ. ດ້ວຍເຫດນີ້,
ຕາມພຣະຄັມຂອງພຣະຢາເວທີ່ປະກາດໂດຍຜ່ານຊາມູເອນຈຶ່ງເປັນຄວາມຈິງ.

[4]ດາວິດ ແລະ ຄົນອິສະຣາເອນທັງຫມົດໄດ້ໄປນະຄອນເຢຣູຊາເລັມ (ນັ້ນຄືຄົນເຢບຸດ). ຂະນະນັ້ນຄົນເຢບຸດຄືຜູ້ອາໄສຂອງແຜ່ນດິນຢູ່ບ່ອນນັ້ນ.
[5]ຊາວເມືອງເຢບຸດທູນດາວິດວ່າ “ພະອົງຈະສະເດັດເຂົ້າມາບ່ອນນີ້ບໍ່ໄດ້.” ຢ່າງໃດກໍດີ
ດາວິດໄດ້ຍຶດເອົາປ້ອມເມືອງຊີໂອນໄວ້ເປັນເມືອງຂອງດາວິດ.[6]ດາວິດໄດ້ກ່າວ,
“ຜູ້ໃດກໍຕາມທີ່ໂຈມຕີຊະນະຄົນເຢບຸດໄດ້ກ່ອນຫມູ່ຈະໄດ້ເປັນຫົວຫນ້າ ແລະ ຜູ້ບັງຄັບບັນຊາ.”
ດັ່ງນັ້ນໂຢອາບລູກຊາຍຂອງນາງເຊຣູຢາໄດ້ໂຈມຕີກ່ອນ ລາວຈຶ່ງໄດ້ເປັນຫົວຫນ້າ.
[7]ຈາກນັ້ນ ດາວິດໄດ້ຢູ່ໃນທີ່ປ້ອມອັນເຂັ້ມແຂງ. ເພາະສະນັ້ນພວກເຂົາຈຶ່ງໃຫ້ຊື່ບ່ອນນັ້ນວ່າເມືອງຂອງດາວິດ.
[8]ພະອົງໄດ້ກໍ່ສ້າງກຳແພງອ້ອມຮອບເມືອງຕັ້ງແຕ່ມິນໂລໂດຍຮອບ. ໂຢອາບກໍໄດ້ສ້ອມແປງສ່ວນທີ່ເຫລືອຂອງເມືອງນັ້ນ.
[9]ດາວິດໄດ້ຈະເຣີນຍິ່ງໃຫຍ່ຂຶ້ນ ເພາະວ່າພຣະຢາເວຈອມໂຍທາໄດ້ສະຖິດຢູ່ກັບພະອົງ.
[10]ຕໍ່ໄປນີ້ແມ່ນຄົນທີ່ເກັ່ງກ້າໃນພວກວີຣະບຸຣຸດທີ່ຢູ່ຝ່າຍດາວິດ,
ຜູ້ທີ່ສະຫນັບສະຫນູນພະອົງຢ່າງແຂງແຮງໃນຣາຊະອານາຈັກຂອງພະອົງດ້ວຍກັນກັບຊາວອິສະຣາເອນທັງຫມົດ,
ຕັ້ງພະອົງໃຫ້ເປັນກະສັດຕາມພຣະຄັມຂອງພຣະຢາເວກ່ຽວກັບເລື່ອງອິສະຣາເອນ.[11]ຕໍ່ໄປນີ້ແມ່ນຈຳນວນວີຣະບຸຣຸດຂອງດາວິດຄື
ຢາໂຊເບອາມລູກຊາຍຂອງຄົນຮັກໂມນີເປັນຫົວຫນ້າ, ພວກຜູ້ບັງຄັບບັນຊາທະຫານສາມສິບຄົນ.
ລາວຍົກຫອກຂອງລາວສູ້ຮົບກັບຄົນສາມຮ້ອຍຄົນ ແລະ ຂ້າຕາຍໃນຄາວດຽວກັນ.
[12]ຖັດຈາກລາວຄືເອເລອາຊາ ລູກຊາຍໂດໂດ, ຄົນອາໂຮອາ, ຊຶ່ງເປັນຜູ້ຫນຶ່ງໃນວີຣະບຸຣຸດທັງສາມຄົນຂອງດາວິດ.[13]ລາວຢູ່ກັບດາວິດທີ່ປັດດຳມິມ,
ແລະ ເມື່ອຄົນຟີລິສະຕິນຊຸມນຸມກັນເຮັດສົງຄາມຢູ່ບ່ອນນັ້ນ, ມີທີ່ດິນຕອນຫນຶ່ງມີເຂົ້າບາເລເຕັມໄປຫມົດ ແລະ
ຄົນທັງຫລາຍກໍປົບຫນີຕໍ່ຫນ້າຄົນຟີລິສະຕິນ.[14]ພວກເຂົາໄດ້ຢືນຢູ່ທ່າມກາງທີ່ດິນຕອນນັ້ນ. ພວກເຂົາປ້ອງກັນດິນຕອນນັ້ນໄວ້ ແລະ
ໄດ້ຂ້າຄົນຟີລິສະຕິນ ພຣະຢາເວໄດ້ຊ່ວຍພວກເຂົາໃຫ້ພົ້ນດ້ວຍຊັຍຊະນະອັນຍິ່ງໃຫຍ່.
[15]ຈາກນັ້ນໃນພວກນາຍທະຫານເອກສາມສິບຄົນນັ້ນ ມີສາມຄົນໄດ້ລົງໄປຮອດກ້ອນຫີນດານ ເພື່ອໄປຫາດາວິດຢູ່ໃນຖ້ຳອະດຸລາມ.
ໃນຂະນະທີ່ກອງທັບຂອງຄົນຟີລິສະຕິນຕັ້ງຄ້າຍພັກທີ່ຮ່ອມພູເຣຟາອີມ.[16]ໃນຄາວນັ້ນ ດາວິດຢູ່ໃນປ້ອມທີ່ເຂັ້ມແຂງ
ໃນຂະນະທີ່ກອງທັບຟີລິສະຕິນໄດ້ຕັ້ງປ້ອມຢູ່ທີ່ເບັດເລເຮັມ.[17]ດາວິດໄດ້ກະຫາຍນ້ຳ ແລະ ກ່າວດ້ວຍຄວາມອາລັຍວ່າ, “ໂອ້
ໃຜນໍຈະສົ່ງນ້ຳຈາກບໍ່ນ້ຳທີ່ເບັດເລເຮັມ, ຊຶ່ງຢູ່ໃກ້ຂ້າງປະຕູເມືອງມາໃຫ້ເຮົາດື່ມໄດ້!”.
[18]ດັ່ງນັ້ນຄົນທັງສາມກໍແຫກຄ້າຍຂອງຄົນຟີລິສະຕິນເຂົ້າໄປ ແລະ ຕັກນ້ຳມາຈາກບໍ່ເບັດເລເຮັມ, ທີ່ຢູ່ຂ້າງປະຕູເມືອງ.
ພວກເຂົາໄດ້ນຳເອົາມາຖວາຍແກ່ດາວິດ, ແຕ່ດາວິດບໍ່ໄດ້ດື່ມນ້ຳນັ້ນ. ແຕ່ພະອົງໄດ້ຖອກອອກຖວາຍແດ່ພຣະຢາເວແທນ.[19]ຫລັງຈາກນັ້ນກ່າວວ່າ,
“ໂອ້ ພຣະຢາເວ, ຂໍຢ່າໃຫ້ຂ້ານ້ອຍເຮັດການຢ່າງນີ້, ຄວນບໍທີ່ຂ້ານ້ອຍຈະດື່ມເລືອດຂອງຄົນເຫລົ່ານີ້ ຜູ້ທີ່ສ່ຽງຊີວິດຂອງພວກເຂົາ?”
ເພາະຍ້ອນການສ່ຽງຊີວິດຂອງພວກເຂົາເອງ ພວກເຂົາຈຶ່ງໄດ້ເອົານ້ຳນີ້ມາ ເພາະສະນັ້ນ
ດາວິດຈຶ່ງບໍ່ໄດ້ດື່ມນ້ຳທີ່ທະຫານເກັ່ງກ້າສາມຄົນນັ້ນໄດ້ເອົາມາ.
[20]ອາບີຊາຍນ້ອງຊາຍຂອງໂຢອາບ, ເປັນຫົວຫນ້າຂອງສາມຄົນນັ້ນ. ເພິ່ນໄດ້ຍົກຫອກຂອງເພິ່ນສູ້ຮົບກັບຄົນສາມຮ້ອຍ ແລະ ຂ້າພວກເຂົາ.
ເພິ່ນຈຶ່ງໄດ້ຮັບຊື່ສຽງເຫມືອນກັບວີຣະບຸຣຸດສາມຄົນນັ້ນ.[21]ໃນຈຳນວນສາມຄົນ, ເພິ່ນມີຊື່ສຽງຫລາຍກວ່າອີກສອງຄົນນັ້ນ ແລະ
ໄດ້ເປັນຜູ້ບັງຄັບບັນຊາພວກເຂົາ. ແຕ່ເພິ່ນບໍ່ມີຍົດເທົ່າກັບສາມຄົນທຳອິດນັ້ນ.
[22]ເບນາຢາເປັນລູກຊາຍຂອງເຢໂຮຢາດາເປັນລູກຊາຍຜູ້ແຂງແຮງ ຜູ້ຊຶ່ງໄດ້ກະທຳໃນສິ່ງທີ່ກ້າຫານຫລາຍ.
ລາວໄດ້ຂ້າລູກຊາຍສອງຄົນຂອງອາລີເອນຄົນໂມອາບ. ລາວໄດ້ລົງໄປຂ້າສິງໂຕໃຫຍ່ໃນຫລຸມໃນມື້ທີ່ມີຫິມະຕົກ.[23]ລາວໄດ້ຂ້າຄົນເອຢິບ,
ຄົນຫນຶ່ງເປັນຊາຍທີ່ມີຮູບຮ່າງໃຫຍ່ ສູງຫ້າສອກ. ຄົນເອຢິບຄົນນັ້ນຖືຫອກເຫມືອນໄມ້ກຳພັນ ຕໍາແຜ່ນ, ແຕ່ເບນາອີຢາຖືໄມ້ເທົ້າລົງໄປຫາລາວ
ແລະ ຍາດເອົາຫອກຈາກມືຂອງຄົນເອຢິບ ແລະ ຂ້າດ້ວຍຫອກຂອງລາວເອງ.
[24]ສິ່ງເຫລົ່ານີ້ເບນາຢາລູກຊາຍເຢໂຮຢາດາໄດ້ເຮັດ ແລະ ໄດ້ຮັບຊື່ສຽງໃນຫມູ່ທະຫານທີ່ເກັ່ງກ້າສາມຄົນນັ້ນ.[25]ເບິ່ງແມ໋
ລາວມີຊື່ສຽງໂດ່ງດັງກວ່າສາມສິບຄົນນັ້ນ, ແຕ່ລາວບໍ່ມີຍົດສັກເທົ່າກັບສາມຄົນທຳອິດ.
ດາວິດໄດ້ແຕ່ງຕັ້ງລາວໃຫ້ເປັນຜູ້ບັງຄັບບັນຊາທະຫານຮັກສາພະອົງ.
[26]ຍັງມີພວກທະຫານທີ່ເກັ່ງກ້າຂອງກອງທັບຄື ອາສາເຮນນ້ອງຊາຍຂອງໂຢອາບ, ເອນຮະນັນລູກຊາຍຂອງໂດໂດຊາວເບັດເລເຮັມ,
[27]ຊາມໂມດຊາວເມືອງຮາໂຣ, ເຮເລັດຄົນເປໂລນ,[28]ອີຣາລູກຊາຍອີກເກດຊາວເມືອງເຕໂກອາ, ອາບີເອເຊຊາວເມືອງອານາໂທດ,
[29]ສິບເບກາຍຄົນຮູຊາຍ, ອີລາຍ ຄົນອາໂຮອາ,
[30]ມາຮາຣາຍຊາວເນໂຕຟາ, ເຮເລັດລູກຊາຍບາອານາຊາວເນໂຕຟາ,[31]ອີໄທລູກຊາຍຣີບາຍເມືອງກິເບອາຄົນເບັນຢາມິນ, ເບນາຢາ
ຊາວປີຣາໂທນ,[32]ຮູຣາຍຊາວລາມທານກາອາດ, ອາບີເອນ ຄົນອາບາດ,[33]ອາຊະມາເວດຄົນບາຮູຣູມ, ເອລີຢາບາ ຊາວຊາອານໂບນ.
[34]ລູກຫລານຮາເຊັມຄົນກີໂຊນ, ໂຢນາທານລູກຊາຍຊາກີ ຊາວຮາຣາ,[35]ອາຮີອາມລູກຊາຍສາກາ ຊາວຮາຣາ, ເອລີຟັນ ລູກຊາຍອູເຣ,[36]ເຮເຟ
ຄົນເມເກຣາດ, ອາຮີຢາຄົນເປໂລນ,[37]ເຮດຊະໂຣ ຊາວກາເມນ, ນາອາຣາຍລູກຊາຍເອຊະບາຍ.

[38]ໂຢເອບນ້ອງຊາຍນາທານ, ມິບຮາລາລູກຊາຍຮັກຣີ,[39]ເຊເລັກຄົນອຳໂມນ, ນາຮາຣາຍ ຊາວເບໂຣທາຍ
(ຜູ້ຖືອາວຸດຂອງໂຢອາບລູກຊາຍຂອງນາງເຊຣູຢາ),[40]ອີຣາຄົນອິດຣີ, ກາເຣບຄົນອິດຣີ,[41]ອູຣີຢາຄົນຮິດຕີ, ຊາບາດລູກຊາຍອາຣະລາຍ.
[42]ອາດີນາລູກຊາຍຊີຊາຄົນຣູເບັນ (ເປັນຫົວໜ້າຂອງຄົນຣູເບັນ) ແລະສາມສິບຄົນທີ່ຢູ່ນຳກັນກັບພວກເຂົາ.[43]ຮານານລູກຊາຍມາອາກາ, ແລະ
ໂຢຊາຟັດ ຄົນມິດນີ,[44]ອຸດຊີຢາຊາວອັດຊະເຕຣາດ, ຊາມາ ແລະ ເຢອີເອນລູກຊາຍໂຮທາມຄົນອາໂຣເອຄົນອາໂຣເອ,
[45]ເຢດີອາເອນລູກຊາຍຊິມຣີ, ໂຢຮາ (ນ້ອງຊາຍຂອງລາວ ຊາວຕີເຊ),[46]ເອລີເອນຊາວມາຮາວາ, ເຢຣີບາຍ ແລະໂຢຊາວີຢາ
ລູກຊາຍເອນນາອາມ, ອິທະມາ ຊາວໂມອາບ,[47]ເອລີເອນ, ໂອເບັດ ແລະ ຢາອາສີເອນ ຊາວເມໂຊບາ.

 generated on Tue Jun 17 19:01:42 2025

12 [1]ຜູ້ຊາຍເຫລົ່ານີ້ໄດ້ມາຫາດາວິດທີ່ຊິກລັກ, ຂະນະທີ່ພະອົງຍັງລີ້ຊາອູນລູກຊາຍຂອງກີເຊ. ພວກເຂົາເປັນຄົນໃນຈຳພວກທີ່ເກັ່ງກ້າ
ຊຶ່ງຊ່ວຍພະອົງໃນການສູ້ຮົບ.[2]ພວກເຂົາເປັນນັກຍິງທະນູ ພວກເຂົາແກວ່ງກ້ອນຫີນດ້ວຍສະຫລິງ ແລະ ຍິງທະນູໄດ້ດ້ວຍມືຂວາ ແລະ
ຫລືມືຊ້າຍ. ພວກເຂົາເປັນຄົນເບັນຢາມິນ, ຊຶ່ງເປັນພີ່ນ້ອງຂອງຊາອູນ.

[3]ອາຮີເອເຊເປັນຫົວຫນ້າ, ຖັດໄປແມ່ນໂຢອາດລູກຊາຍຂອງເຊມາອາຊາວເມືອງກິເບອາ. ເຢຊີເອນ ກັບເປເລັດ
ລູກຊາຍທັງສອງຂອງອາຊະມາເວດ. ຍັງມີເບຣາກາ, ເຢຮູຊາວອານາໂທດ,[4]ອີຊະມາຢາຊາວກິເບໂອນ,
ເປັນຄົນທີ່ເກັ່ງກ້າໃນຈຳພວກສາມສິບຄົນນັ້ນ (ແລະເປັນຫົວຫນ້າໃຫຍ່ໃນຈຳນວນສາມສິບຄົນນັ້ນ); ເຢເຣມີຢາ, ຢາຮາຊີເອນ, ໂຢຮານານ,
ໂຢຊາບັດຊາວເມືອງເກເດຣາ,
[5]ເອລູຊາຍ, ເຢຣີໂມດ, ເບອາລີຢາ, ເຊມາຣີຢາ, ເຊຟາຕີຢາຄົນຮາຣຸບ,[6]ອີດຊີຢາ, ອັດຊາເຣນ, ໂຢເອເຊ, ຢາໂຊເບອາມຄົນໂກຣາ,
ແລະ[7]ໂຢເອລາແລະ ເຊບາດີຢາ ລູກຊາຍຂອງເຢໂຣຮາມຊາວເກໂດເຣ.
[8]ຄົນຄາດບາງສ່ວນໄດ້ເຂົ້າໄປຫາດາວິດທີ່ປ້ອມອັນເຂັ້ມແຂງໃນຖິ່ນແຫ້ງແລ້ງກັນດານ. ພວກເຂົາເປັນຜູ້ທີ່ມີໃຈກ້າຫານ ແລະ
ເປັນຜູ້ຊຳນານໃນການເຮັດເສິກ, ພວກເຂົາຖືໂລ່ ແລະ ຫອກ; ຮູບຫນ້າຂອງພວກເຂົາເຫມືອນຫນ້າໂຕສິງ.
ພວກເຂົາແລ່ນໄວເຫມືອນກວາງຢູ່ເທິງພູເຂົາ.
[9]ເອເຊເປັນຜູ້ນຳ, ໂອບາດີຢາທີສອງ ແລະ ເອລີອາບທີສາມ,[10]ມິດຊະມັນນາທີສີ່, ເຢເຣມີຢາທີຫ້າ,[11]ອາດຕາຍທີຫົກ, ເອລີເອນທີເຈັດ,
[12]ໂຢຮານານທີແປດ, ເອນຊາບັດທີເກົ້າ,[13]ເຢເຣມີຢາທີສິບ, ມັກບັນນາຍທີສິບເອັດ.
[14]ຄົນເຫລົ່ານີ້ເປັນລູກຊາຍຂອງຄົນຄາດ ເປັນນາຍທະຫານ. ເປັນຜູ້ນຳທະຫານຢ່າງຫນ້ອຍຫນຶ່ງຮ້ອຍຄົນ,
ແລະເປັນຜູ້ນຳທະຫານຫລາຍທີ່ສຸດຫນຶ່ງພັນຄົນ.[15]ພວກເຫລົ່ານີ້ເປັນຄົນທີ່ຂ້ວາມແມ່ນ້ຳຈໍແດນໃນເດືອນທຳອິດ ເມື່ອນ້ຳຖ້ວມຕາຝັ່ງທັງຫມົດ,
ແລະ ຂັບໄລ່ຄົນທີ່ອາໄສຢູ່ຕາມບັນດາຮ່ອມພູ, ແຕກຫນີໄປທາງທິດຕາເວັນອອກ ແລະ ທິດຕາເວັນຕົກ.
[16]ມີຜູ້ຊາຍເບັນຢາມິນ ແລະ ຄົນຢູດາມາເຝົ້າຍາມດາວິດໃນປ້ອມກຳບັງທີ່ເຂັ້ມແຂງແລ້ວ.[17]ດາວິດໄດ້ອອກໄປພົບພວກເຂົາ ແລະ
ໄດ້ກ່າວກັບພວກເຂົາວ່າ: “ຖ້າທ່ານທັງຫລາຍມາຫາຂ້າພະເຈົ້າເພື່ອເປັນມິດໄມຕີ ເພື່ອຊ່ວຍຂ້າພະເຈົ້າ, ເພື່ອຮ່ວມກັບຂ້າພະເຈົ້າ,
ແຕ່ຖ້າມາເພື່ອຈະມອບຂ້າພະເຈົ້າໃຫ້ແກ່ພວກສັດຕຣູຂອງຂ້າພະເຈົ້າ, ຂໍໃຫ້ພຣະເຈົ້າແຫ່ງບັນພະບຸຣຸດຂອງຂ້າພະເຈົ້າທັງຫລາຍທອດພຣະເນດ
ແລະ ລົງໂທດທ່ານທັງຫລາຍເຖີດ, ເນື່ອງຈາກຂ້າພະເຈົ້າບໍ່ມີຄວາມຜິດໃດ.”
[18]ແລ້ວພຣະວິນຍານໄດ້ມາເທິງອາມາສາຍ, ຫົວຫນ້າພວກຜູ້ບັງຄັບບັນຊາທັງສາມສິບຄົນນັ້ນ ແລະ ເພິ່ນທູນວ່າ “ຂ້າແດ່ດາວິດ,
ພວກຂ້ານ້ອຍທັງຫລາຍເປັນຂອງພະອົງ. ຂ້າແດ່ບຸດຂອງເຢຊີເອີຍ, ພວກເຮົາຢູ່ຝ່າຍພະອົງ, ລູກຂອງເຢຊີເອີຍ. ສັນຕິສຸກ, ຂໍສັນຕິສຸກ
ຈົ່ງມີແດ່ພະອົງ. ຂໍສັນຕິສຸກຈົ່ງມີແດ່ຄົນທັງຫລາຍທີ່ຊ່ວຍພະອົງ, ເພາະວ່າພຣະເຈົ້າຂອງພະອົງໄດ້ອຸປະຖຳພະອົງຢູ່.”
ແລ້ວດາວິດກໍໄດ້ຮັບພວກເຂົາໄວ້ ແລະ ໄດ້ຕັ້ງໃຫ້ເປັນນາຍທະຫານໃນກອງທັບ.
[19]ຈາກຕະກູນມານາເຊກໍມີຄົນຈຳນວນຫລາຍທີ່ໄດ້ຫລົບຫນີໄປເຂົ້າຝ່າຍດາວິດເຫມືອນກັນ ເມື່ອພະອົງມາກັບຄົນຟີລິດສະຕິນຕໍ່ສູ້ກັບຊາອູນ.
ແຕ່ພວກຝ່າຍດາວິດບໍ່ໄດ້ຊ່ວຍຄົນຟີລິສະຕິນ, ເພາະພວກຜູ້ປົກຄອງຄົນຟີລິສະຕິນ ໄດ້ປຶກສາກັນ ແລະ ໄດ້ສົ່ງດາວິດໄປ. ພວກເຂົາເວົ້າກັນວ່າ,
“ລາວຈະຫລົບຫນີໄປຄືນດີກັບຊາອູນນາຍຂອງລາວ ຊຶ່ງສ່ຽງຕໍ່ຊີວິດຂອງພວກເຮົາ.”[20]ຂະນະທີ່ດາວິດໄປເຖິງເມືອງຊິກລັກ,
ຊາວມານາເຊພວກນີ້ໄດ້ຫລົບຫນີໄປສົມທົບກັບພະອົງຄື ອັດນາ, ໂຢຊາບັດ, ເຢດີອາເອນ, ມີກາເອນ, ໂຢຊາບັດ, ເອລີຮູ ແລະ ຊິນເລທາຍ,
ຫົວຫນ້າບັນດາກອງພັນທີ່ຢູ່ໃນຕະກູນມານາເຊ.
[21]ພວກເຂົາຊ່ວຍເຫລືອດາວິດຕໍ່ສູ້ພວກໂຈນປຸ້ນ, ເພາະພວກເຂົາທັງຫມົດເປັນທະຫານທີ່ເກັ່ງກ້າ ແລະ ເປັນຜູ້ບັງຄັບບັນຊາໃນກອງທັບ.
[22]ໃນສມັຍນັ້ນ, ທຸກມື້ມີຄົນມາເຂົ້າຮ່ວມຝ່າຍຂອງດາວິດ ເພື່ອຈະຊ່ວຍເຫລືອພະອົງ, ຈົນເປັນກອງທັບໃຫຍ່ ເຫມືອນກອງທັບຂອງພຣະເຈົ້າ.
[23]ນີ້ເປັນບັນທຶກຂອງຈຳນວນທະຫານທີ່ຖືອາວຸດສຳລັບສົງຄາມທີ່ໄດ້ມາຫາດາວິດໃນເມືອງເຮັບໂຣນ, ເພື່ອຈະມອບຣາຊະອານາຈັກ
ຂອງຊາອູນໃຫ້ແກ່ພະອົງ, ຕາມພຣະຄັມຂອງພຣະຢາເວ.[24]ຈາກຢູດາທີ່ຖືໂລ່ ແລະ ຫອກມີຫົກພັນແປດຮ້ອຍຄົນ,
ເປັນທະຫານທີ່ຕິດອາວຸດພ້ອມສຳລັບສົງຄາມ.[25]ຈາກລູກຫລານຊີເມໂອນ ມີທະຫານທີ່ເກັ່ງກ້າຊຳນານໃນການເຮັດເສິກ ເຈັດພັນຫນຶ່ງຮ້ອຍຄົນ.
[26]ຈາກລູກຫລານຊາວເລວີສີ່ພັນຫົກຮ້ອຍຄົນ ພ້ອມເຂົ້າສູ້ຮົບ.[27]ເຢໂຮຢາດາເປັນຫົວຫນ້າລູກຫລານອາໂຣນ ແລະ
ມີຄົນຊຳນານມານຳເພິ່ນສາມພັນເຈັດຮ້ອຍຄົນ.[28]ຊາໂດກທະຫານຫນຸ່ມທີ່ມີໃຈກ້າຫານ, ແລະ ຄົນຈາກຄອບຄົວບັນພະບຸຣຸດຂອງລາວເອງ
ຊຶ່ງເປັນຜູ້ບັງຄັບບັນຊາຊາວສອງຄົນ.
[29]ຈາກລູກຫລານເບັນຢາມິນ, ພີ່ນ້ອງຂອງຊາອູນສາມພັນຄົນ. ຊຶ່ງພວກເຂົາຍັງຄົງຈົງຮັກພັກດີຕໍ່ເຊື້ອສາຍຂອງຊາອູນຈົນເຖິງເວລານີ້.
[30]ຈາກພວກລູກຫລານເອຟຣາຢິມ ທະຫານເກັ່ງກ້າສອງຫມື່ນແປດຮ້ອຍຄົນ, ເປັນຄົນທີ່ມີຊື່ສຽງດີໃນຄອບຄົວ ບັນພະບຸຣຸດຂອງພວກເຂົາ.
[31]ຈາກມານາເຊເຄິ່ງຕະກູນຫນຶ່ງຫມື່ນແປດພັນຄົນ ຜູ້ຊຶ່ງພວກເຂົາໄດ້ບົ່ງຊື່ໄວ້, ໄດ້ພາກັນມາ ແລະ ຕັ້ງດາວິດເປັນກະສັດ.
[32]ຈາກລູກຫລານອິດຊາຄ, ຊຶ່ງມີຜູ້ນຳສອງຮ້ອຍຄົນຜູ້ທີ່ເຂົ້າໃຈໃນເລື່ອງຈັງຫວະເວລາ ແລະ ໄດ້ຮູ້ວ່າອິສະຣາເອນຄວນເຮັດສິ່ງໃດ.
ພວກພີ່ນ້ອງທັງຫມົດກໍຢູ່ໃຕ້ການບັງຄັບບັນຊາຂອງພວກເຂົາ.[33]ຈາກຄົນເຊບູລູນມີຫ້າຫມື່ນຄົນທີ່ເຝິກແລ້ວກຽມພ້ອມເຂົ້າສູ້ຮົບ,
ມີອາວຸດທຸກຢ່າງເພື່ອເຮັດສົງຄາມ, ແລະ ບໍ່ແມ່ນດ້ວຍສອງຈິດສອງໃຈ.
[34]ຈາກພວກນັບທາລີ ຜູ້ບັງຄັບບັນຊາຫນຶ່ງພັນຄົນ, ແລະ ຊຶ່ງມີຄົນຖືໂລ່ ແລະ ຫອກມາດ້ວຍສາມຫມື່ນເຈັດພັນຄົນ.
[35]ຈາກພວກດານມີຄົນທີ່ໄດ້ເຝິກແອບໃນການສູ້ຮົບແລ້ວສອງຫມື່ນແປດພັນຫົກຮ້ອຍຄົນ.
[36]ຈາກພວກອາເຊ ສີ່ຫມື່ນຄົນທີ່ໄດ້ເຝິກແອບແລ້ວພ້ອມທີ່ຈະໄປສົງຄາມ.[37]ຈາກຟາກແມ່ນ້ຳຢໍແດນຟາກນັ້ນ ຊາວຣູເບັນ, ຊາວຄາດ ແລະ
ຈາກມານາເຊເຄິ່ງຕະກູນ, ມີຫນຶ່ງແສນສອງຫມື່ນຄົນທີ່ຕິດອາວຸດທຸກຢ່າງເພື່ອສູ້ຮົບ.
[38]ທະຫານທັງຫມົດເຫລົ່ານີ້, ພ້ອມທີ່ຈະອອກສະຫນາມຮົບກໍມາຮອດເມືອງເຮັບໂຣນ
ດ້ວຍຄວາມຕັ້ງໃຈທີ່ຈະຕັ້ງດາວິດເປັນກະສັດປົກຄອງອິສະຣາເອນທັງຫມົດ. ບັນດາອິສະຣາເອນທີ່ເຫລືອຢູ່
ກໍເປັນໃຈອັນດຽວກັນທີ່ຈະແຕ່ງຕັ້ງດາວິດໃຫ້ເປັນກະສັດ.[39]ພວກເຂົາທັງຫລາຍໄດ້ຢູ່ບ່ອນນັ້ນກັບດາວິດສາມມື້, ທັງກິນແລະດື່ມ,
ເພາະວ່າພີ່ນ້ອງຂອງພວກເຂົາໄດ້ຕຽມອາຫານໄວ້ສຳລັບພວກເຂົາແລ້ວ.[40]ຫລາຍໄປກວ່ານັ້ນ,


generated on Tue Jun 17 19:01:42 2025

ອິກຄົນທັງຫລາຍທີ່ຢູ່ໃກ້ບ່ອນນັ້ນຈົນໄປຮອດອິດຊາຄາ, ແລະ ເຊບູລູນ ແລະ ນັບທາລີກໍໄດ້ຈັດອາຫານບັນທຸກໃສ່ຫລັງລວາ, ອູດ, ຫລັງລໍ ແລະ ງົວ, ແລະ ມີອາຫານຢ່າງຫລວງຫລາຍເປັນແປ້ງ ແຜ່ນຫມາກເດື່ອເທດ, ຫໍ່ອະງຸ່ນແຫ້ງ, ນ້ຳອະງຸ່ນ, ນ້ຳມັນ, ງົວ, ແລະ ແກະ ສຳລັບອິສະຣາເອນໃນການສະເຫລີມສະຫລອງ.

 generated on Tue Jun 17 19:01:42 2025

# 13

[1]ດາວິດໄດ້ປຶກສາຫາລືກັບນາຍພັນ ແລະ ນາຍຮ້ອຍ, ກັບບັນດາຫົວຫນ້າທຸກຄົນ.[2]ດາວິດກ່າວກັບຊຸມນຸມຊົນອິສະຣາເອນທັງປວງວ່າ,
“ຖ້າທ່ານທັງຫລາຍເຫັນດີ, ແລະ ຖ້າເປັນນ້ຳພຣະທັຍຂອງພຣະຢາເວພຣະເຈົ້າຂອງເຮົາ,
ກໍໃຫ້ເຮົາທັງຫລາຍສົ່ງຄົນໄປຫາພີ່ນ້ອງຂອງເຮົາຜູ້ທີ່ເຫລືອຢູ່ໃນແຜ່ນດິນອິສະຣາເອນທັງຫມົດໃຫ້ໄປຫາພວກປະໂລຫິດ ແລະ
ພວກເລວີຊຶ່ງຢູ່ໃນຫົວເມືອງ ແລະ ທົ່ງຫຍ້າຂອງພວກເຂົາ ເພື່ອໃຫ້ພວກເຂົາມາໂຮມກັບພວກເຮົາພ້ອມກັນ.
[3]ໃຫ້ເຮົາທັງຫລາຍນຳຫີບແຫ່ງພຣະເຈົ້າຂອງພວກເຮົາມາຢູ່ນຳພວກເຮົາອີກ, ເພາະໃນສມັຍຂອງຊາອູນ
ພວກເຮົາບໍ່ໄດ້ສະແຫວງຫາພຣະອົງ.”[4]ຊຸມນຸມຊົນທັງຫມົດກໍຕົກລົງທີ່ຈະເຮັດຕາມ,
ເພາະສິ່ງນັ້ນເປັນສິ່ງທີ່ພໍໃຈໃນສາຍຕາຂອງປະຊາຊົນທັງປວງ.

[5]ເພາະສະນັ້ນ ດາວິດຈຶ່ງປະຊຸມຊາວອິສະຣາເອນທັງຫມົດ, ຕັ້ງແຕ່ຊີໂຮແຫ່ງເອຢິບຈົນຮອດທາງເຂົ້າເມືອງຮາມັດ,
ເພື່ອຈະນຳເອົາຫີບພັນທະສັນຍາຂອງພຣະເຈົ້າມາຈາກກີຣິຢາດ ເຢອາຣີມ.[6]ດາວິດກັບອິສະຣາເອນທັງປວງໄດ້ຂຶ້ນໄປເຖິງບາອາລາ,
ຊຶ່ງຢູ່ກີຣິຢາດ ເຢອາຣີມທີ່ເປັນຂອງຢູດາ, ເພື່ອຈະໄດ້ນຳຫີບພັນທະສັນຍາຂອງພຣະເຈົ້າຈາກບ່ອນນັ້ນ,
ຊຶ່ງຖືກເອີ້ນໃນພຣະນາມຂອງພຣະຢາເວ, ພຣະຢາເວຜູ້ຊົງສະຖິດຢູ່ລະຫວ່າງພວກເຄຣຸບ.
[7]ດັ່ງນັ້ນພວກເຂົາກໍບັນທຸກຫີບພັນທະສັນຍາຂອງພຣະເຈົ້າໄປໃນກວຽນຄັນໃຫມ່. ພວກເຂົາໄດ້ນຳອອກຈາກຄອບຄົວຂອງອາບີນາດາບ. ອຸດຊາ
ແລະ ອາຮີໂອ ຊຶ່ງເປັນຜູ້ທີ່ບັນຊາກວຽນໄປ.[8]ດາວິດກັບອິສະຣາເອນທັງປວງກໍຊົມຊື່ນຍິນດີຢູ່ຕໍ່ພຣະພັກພຣະເຈົ້າດ້ວຍເຕັມກຳລັງຂອງພວກເຂົາ.
ດ້ວຍເພງ ພິນຄູ່, ພິນໃຫຍ່, ກອງ, ແສ່ງ, ແລະ ແກ.
[9]ເມື່ອພວກເຂົາມາເຖິງລານຟາດເຂົ້າຂອງກີໂດນ, ອຸດຊາກໍຢຽດມືອອກເພື່ອຈັບຫີບໄວ້ ເພາະງົວເຕະສະດຸດ.
[10]ແລ້ວພຣະພິໂຣດຂອງພຣະຢາເວໄດ້ພຸ່ງຂຶ້ນຕໍ່ອຸດຊາ, ແລະ ພຣະຢາເວໄດ້ປະຫານຊີວິດລາວ ເພາະລາວຢຽດມືແຕະຕ້ອງຫີບນັ້ນ.
ລາວກໍສິ້ນຊີວິດຕໍ່ພຣະພັກພຣະເຈົ້າ.[11]ດາວິດບໍ່ຊົງພໍໃຈ ເພາະພຣະຜູ້ເປັນເຈົ້າໄດ້ທຳລາຍອຸດຊາ. ສະນັ້ນ ຈຶ່ງເອີ້ນບ່ອນນັ້ນວ່າ
ເປເຣັດອຸດຊາຈົນເຖິງທຸກມື້ນີ້.
[12]ໃນມື້ນັ້ນດາວິດໄດ້ຢ້ານຢຳນັບຖືພຣະເຈົ້າ. ລາວກ່າວວ່າ “ເຮົາຈະນຳຫີບຂອງພຣະ-
ເຈົ້າເຂົ້າໄປໃນເຮືອນຂອງເຮົາຢ່າງໃດ?’[13]ດາວິດຈຶ່ງບໍ່ໄດ້ຍ້າຍຫີບພັນທະສັນຍາໄປໄວ້ໃນເມືອງຂອງດາວິດ,
ແຕ່ໄດ້ນຳຫີບແວະໄປໄວ້ທີ່ເຮືອນໂອເບັດເອໂດມ ຊາວກັດ.
[14]ຫີບພັນທະສັນຍາຂອງພຣະເຈົ້າໄດ້ຄ້າງຢູ່ກັບຄອບຄົວຂອງໂອເບັດເອໂດມທີ່ເຮືອນຂອງລາວສາມເດືອນ. ດັ່ງນັ້ນ
ພຣະຢາເວໄດ້ອວຍພຣະພອນແກ່ຄອບຄົວຂອງໂອເບັດເອໂດມ ແລະ ສິ່ງທັງຫມົດທີ່ລາວມີຢູ່.

 generated on Tue Jun 17 19:01:42 2025

14 [1]ຈາກນັ້ນຮີຣາມກະສັດເມືອງຕີເຣໄດ້ໃຊ້ຜູ້ສື່ງຂ່າວໄປຫາດາວິດ, ແລະ ໄດ້ສົ່ງໄມ້ແປກ ພ້ອມທັງຊ່າງກໍ່ ແລະ
ຊ່າງໄມ້ເພື່ອຈະສ້າງວັງຖວາຍແກ່ດາວິດ.[2]ດາວິດຮູ້ວ່າ ພຣະຢາເວໄດ້ສະຖາປະນາຕົນເອງໃຫ້ເປັນກະສັດອິສະຣາເອນ, ແລະ
ເພາະຣາຊະອານາຈັກຂອງພະອົງ ກໍເປັນທີ່ຍົກຍໍຫລາຍຂຶ້ນ ເພື່ອເຫັນແກ່ອິສະຣາເອນປະຊາຊົນຂອງພຣະອົງ.

[3]ດາວິດໄດ້ເອົາເມຍເພີ່ມຂຶ້ນໃນນະຄອນເຢຣູຊາເລັມ ແລະ ໄດ້ມີບຸດຊາຍ ແລະ ບຸດຍິງຫລາຍຂຶ້ນຕື່ມອີກ.[4]ຕໍ່ໄປນີ້ແມ່ນລາຍຊື່ລູກຊາຍ
ຊຶ່ງເກີດຢູ່ໃນນະຄອນເຢຣູຊາເລັມຄື ຊາມມູອາ, ໂຊບາບ, ນາທານ, ໂຊໂລໂມນ,[5]ອິບຮາ, ເອລີຊູອາ, ເອນເປເລັດ,[6]ໂນຄາ, ເນເຟັກ, ຢາເຟຍ,
[7]ເອລີຊາມາ, ເບເອລີຢາດາ, ແລະ ເອລີເຟເລັດ.
[8]ເມື່ອຄົນຟີລິສະຕິນໄດ້ຍິນຂ່າວວ່າດາວິດໄດ້ຮັບການເຈີມໃຫ້ເປັນກະສັດປົກຄອງອິສະຣາເອນທັງປວງແລ້ວ,
ຄົນຟີລິສະຕິນທັງຫລາຍກໍຂຶ້ນໄປຊອກຫາດາວິດ. ແຕ່ເມື່ອດາວິດໄດ້ຍິນເລື່ອງນັ້ນກໍສະເດັດອອກໄປສູ້ຮົບກັບພວກເຂົາ.
[9]ຂະນະນັ້ນຝ່າຍຄົນຟີລິສະຕິນໄດ້ບຸກຂຶ້ນໄປໃນຮ່ອມພູເຣຟາຢິມ.
[10]ຈາກນັ້ນດາວິດໄດ້ທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ. ພະອົງໄດ້ກ່າວວ່າ, “ສົມຄວນບໍທີ່ຂ້າພະອົງຈະຂຶ້ນໄປຕໍ່ສູ້ພວກຟີລິສະຕິນ?
ພຣະອົງຈະມອບພວກເຂົາໄວ້ໃນມືຂອງຂ້າພະອົງຫລືບໍ່?” ພຣະຢາເວກ່າວຕອບພະອົງວ່າ, “ຈົ່ງຂຶ້ນໄປເຖີດ ແລະ
ເຮົາຈະມອບພວກເຂົາໄວ້ໃນມືຂອງເຈົ້າ.”[11]ແລ້ວກະສັດດາວິດຈຶ່ງໄດ້ຂຶ້ນໄປບາອານເປຣາຊິມ, ແລະ ໄດ້ໂຈມຕີຊະນະພວກເຂົາຢູ່ບ່ອນນັ້ນ.
ດາວິດໄດ້ກ່າວວ່າ “ພຣະຢາເວໄດ້ທຸບຂ້າເສິກຂອງຂ້າພະເຈົ້າດ້ວຍມືຂອງຂ້າພະເຈົ້າເຫມືອນດັ່ງກະແສນ້ຳທີ່ໄຫລທັ່ງໃສ່” ດັ່ງນັ້ນ
ພວກເຂົາຈຶ່ງເອີ້ນບ່ອນນັ້ນວ່າ ບາອານເປຣາຊິມ.[12]ພວກຟີລິສະຕິນໄດ້ປະຖິ້ມຮູບເຄົາຣົບຂອງພວກເຂົາໃນບ່ອນນັ້ນ, ແລະ
ດາວິດສັ່ງໃຫ້ຈູດຮູບເຄົາຣົບເຫລົ່ານັ້ນຖິ້ມເສຍ.
[13]ແລ້ວພວກຟີລິສະຕິນໄດ້ໄປທົ່ວຮ່ອມພູນັ້ນອີກ,[14]ເມື່ອດາວິດທູນຖາມພຣະເຈົ້າອີກ, ພຣະເຈົ້າກໍກ່າວຕອບພະອົງວ່າ
“ເຈົ້າຢ່າຂຶ້ນໄປຕາມພວກເຂົາ ຈົ່ງເວັ້ນຫນີໄປອ້ອມຮອບພວກເຂົາ ແລະ ໄປໂຈມຕີພວກເຂົາຢູ່ຖັດຈາກປ່າຕົ້ນມອນ.
[15]ເມື່ອເຈົ້າໄດ້ຍິນສຽງຂະບວນທັບຍ່າງຢູ່ເທິງຍອດຕົ້ນມອນ ເວລານັ້ນຈົ່ງອອກໄປເຮັດເສິກ.
ເພາະວ່າພຣະເຈົ້າໄດ້ສະເດັດອອກໄປກ່ອນຫນ້າເຈົ້າແລ້ວ ເພື່ອຈະໂຈມຕີກອງທັບຂອງພວກຟີລິສະຕິນ.”[16]ດັ່ງນັ້ນ
ກະສັດດາວິດໄດ້ປະຕິບັດຕາມທີ່ພຣະເຈົ້າໄດ້ບັນຊາແກ່ພະອົງ. ພະອົງໄດ້ໂຈມຕີກອງທັບພວກຟີລິສະຕິນ ຕັ້ງແຕ່ເມືອງກີເບໂອນຮອດເມືອງເກເຊ.
[17]ຈາກນັ້ນ ຊື່ສຽງຂອງດາວິດກໍຊ່າລືໄປສູ່ບັນດາປະເທດທັງຫລາຍ, ແລະ ພຣະຢາເວໄດ້ຊົງນຳໃຫ້ປະຊາຊາດທັງປວງຢ້ານກົວດາວິດ.

 generated on Tue Jun 17 19:01:42 2025

# 15

1ດາວິດໄດ້ສ້າງພະຣາຊະວັງຂອງພະອົງຫລາຍຫລັງໃນເມືອງຂອງດາວິດ.
ພະອົງໄດ້ຕຽມສະຖານທີ່ຫນຶ່ງໄວ້ສຳລັບຫີບພັນທະສັນຍາຂອງພຣະເຈົ້າ ແລະ ໄດ້ຕັ້ງເຕັນໄວ້ສຳລັບຫີບນັ້ນ. 2ເມື່ອນັ້ນ ດາວິດໄດ້ກ່າວວ່າ,
“ນອກຈາກຄົນເລວີແລ້ວ ບໍ່ສົມຄວນທີ່ຈະໃຫ້ຄົນອື່ນຫາມຫີບພັນທະສັນຍາຂອງພຣະເຈົ້າ,
ເພາະວ່າພຣະຢາເວໄດ້ຊົງເລືອກພວກນີ້ໄວ້ໃຫ້ຫາມຫີບພັນທະສັນຍາຂອງພຣະຢາເວ, ແລະ
ບົວລະບັດພຣະອົງຕະຫລອດໄປ.” 3ດາວິດໄດ້ໂຮມປະຊຸມອິສະຣາເອນທັງຫມົດຢູ່ທີ່ນະຄອນເຢຣູຊາເລັມ,
ເພື່ອຈະນຳຫີບພັນທະສັນຍາຂອງພຣະຢາເວມາສູ່ບ່ອນ ຊຶ່ງພະອົງໄດ້ຈັດຕຽມໄວ້ແລ້ວສຳລັບຫີບນັ້ນ.

4ດາວິດໄດ້ຮວບຮວມລູກຫລານຂອງອາໂຣນ ແລະ ຄົນເລວີມາໂຮມກັນ. 5ຄືຈາກລູກຫລານໂກຮາດ, ອຸຣີເອນເປັນຫົວຫນ້າ
ພ້ອມກັບພີ່ນ້ອງຂອງລາວ, ຫນຶ່ງຮ້ອຍຊາວຄົນ, 6ຈາກລູກຫລານເມຣາຣີ, ອາສາຢາເປັນຫົວຫນ້າ ພ້ອມກັບພີ່ນ້ອງຂອງລາວ, ສອງຮ້ອຍຊາວຄົນ.
7ຈາກລູກຫລານເກໂຊມ, ໂຢເອນເປັນຫົວຫນ້າກັບພີ່ນ້ອງຂອງລາວ, ຫນຶ່ງຮ້ອຍສາມສິບຄົນ. 8ຈາກລູກຫລານເອລີຊາຟັນ,
ເຊມາຢາເປັນຫົວຫນ້າກັບພີ່ນ້ອງຂອງລາວ, ສອງຮ້ອຍຄົນ. 9ຈາກລູກຫລານເຮັບໂຣນ, ເອລີເອນເປັນຫົວຫນ້າ ກັບພີ່ນ້ອງຂອງລາວ, ແປດສິບຄົນ.
10ຈາກລູກຫລານອຸດຊີເອນ, ອຳມີນາດາບເປັນຫົວຫນ້າກັບພີ່ນ້ອງຂອງລາວ, ຫນຶ່ງຮ້ອຍສິບສອງຄົນ.
11ດາວິດໄດ້ເອີ້ນປະໂລຫິດຄື ຊາໂດກ ແລະ ອາບີອາທາ ແລະພວກເລວີ ຄື ອຸຣີເອນ, ອາສາຢາ, ໂຢເອນ, ເຊມາຢາ, ເອລີເອນ ແລະ
ອຳມີນາດາບ. 12ພະອົງໄດ້ກ່າວກັບພວກເຂົາວ່າ, “ພວກເຈົ້າເປັນຫົວຫນ້າຂອງບັນພະບຸຣຸດຂອງຄົນເລວີ. ຈົ່ງຊຳຣະຕົນຂອງພວກເຈົ້າ,
ພວກພີ່ນ້ອງຂອງພວກເຈົ້າ, ເພື່ອພວກເຈົ້າຈະນຳຫີບພັນທະສັນຍາຂອງພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ຂຶ້ນໄປສະຖານທີ່
ຊຶ່ງເຮົາໄດ້ຈັດຕຽມໄວ້ສຳລັບຫີບນັ້ນ.
13ພວກເຈົ້າບໍ່ໄດ້ໄປຫາມໃນເທື່ອກ່ອນ. ສະນັ້ນ ພຣະຢາເວພຣະເຈົ້າຂອງພວກເຮົາ ຈຶ່ງໄດ້ລົງໂທດພວກເຮົາ,
ເພາະເຮົາບໍ່ໄດ້ສະແຫວງຫາພຣະອົງຕາມກົດບັນຍັດ.” 14ແລ້ວພວກປະໂລຫິດ ແລະ ຄົນເລວີ ຈຶ່ງໄດ້ຊຳຣະຕົນຂອງພວກເຂົາໃຫ້ບໍຣິສຸດ
ເພື່ອຈະນຳຫີບພັນທະສັນຍາຂອງພຣະຢາເວພຣະເຈົ້າຂອງອິສະຣາເອນຂຶ້ນໄປ. 15ຄົນເລວີໄດ້ຫາມຫີບຂອງພຣະເຈົ້າເທິງບ່າດ້ວຍຄານຫາມ—
ຕາມທີ່ໂມເຊໄດ້ສັ່ງພວກເຂົາໄວ້ໃນພຣະຄັມຂອງພຣະຢາເວ.
16ດາວິດໄດ້ສັ່ງແກ່ບັນດາຫົວຫນ້າຂອງຄົນເລວີໃຫ້ແຕ່ງຕັ້ງພວກພີ່ນ້ອງຂອງພວກເຂົາໃຫ້ເປັນນັກຮ້ອງ, ຫລິ້ນເຄື່ອງດົນຕຣີ, ພິນໃຫຍ່, ພິນຄູ່
ແລະ ແສ່ງ, ຫລິ້ນດ້ວຍສຽງດັງ ແລະ ຍົກສຽງໂຫ່ຮ້ອງດ້ວຍຄວາມຊົມຊື່ນຍິນດີ. 17ຄົນເລວີ ຈຶ່ງແຕ່ງຕັ້ງເຮມານລູກຊາຍໂຢເອນ ແລະ
ພີ່ນ້ອງຂອງລາວຄື ອາສັບລູກຊາຍເບເຣກີຢາ. ພວກເຂົາໄດ້ແຕ່ງຕັ້ງຈາກລູກຫລານເມຣາຣີພີ່ນ້ອງຂອງພວກເຂົາຄື ເອທານລູກຊາຍກູຊາຢາ.
18ພ້ອມກັບພວກເຂົານັ້ນ ຍັງໄດ້ແຕ່ງຕັ້ງພີ່ນ້ອງຂອງພວກເຂົາໃນອັນດັບທີສອງຄື ເຊຄາຣີຢາ, ເບັນ, ຢາອາຊີເອນ, ເຊມີຣາໂມດ, ເຢຮີເອນ, ອຸນນີ,
ເອລີອາບ, ເບນາຢາ, ມາອາເສຢາ, ມັດຕີທີຢາ, ເອລີເຟເລຮູ, ມີກເນຢາ, ກັບໂອເບັດເອໂດມ, ແລະ ເຢອີເອນເປັນຄົນເຝົ້າຍາມປະຕູ.
19ຈຳພວກນັກຮ້ອງມີຄື ເຮມານ, ອາສັບ, ແລະ ເອທານ ຊຶ່ງຖືກແຕ່ງຕັ້ງເປັນຄົນຕີແຊ່ງທອງເຫລືອງ. 20ເຊຄາຣີຢາ, ອາຊີເອນ, ເຊມີຣາໂມດ,
ເຢຮີເອນ, ອຸນນີ, ເອລີອາບ, ມາອາເສຢາ ແລະ ເບນາຢາ ຫລິ້ນພິນໃຫຍ່ຕາມສຳນຽງອາລາໂມດ. 21ແຕ່ມັດຕີທີຢາ, ເອລີເຟເລຮູ, ມີກເນຢາ,
ໂອເບັດເອໂດມ, ເຢອີເອນ ແລະ ອາຊາຊີຢາ ເປັນຜູ້ນຳການຫລິ້ນພິນຄູ່ຕາມສຳນຽງເຊມີນິດ.
22ເກນານີຢາ, ຫົວຫນ້າຂອງຄົນເລວີ, ເປັນຜູ້ຄວບຄຸມການຮ້ອງເພງ ເພາະລາວເປັນຄຣູສອນດົນຕຣີ. 23ເບເຣກີຢາ ແລະ ເອນການາ
ເປັນຜູ້ເຝົ້າປະຕູຫີບພັນທະສັນຍາ. 24ປະໂລຫິດເຊບານີຢາ, ໂຢຊາຟັດ, ເນທາເນນ, ອາມາສາຍ, ເຊຄາຣີຢາ, ເບນາຢາ ແລະ
ເອລີເອເຊໄດ້ເປົ່າແກຕໍ່ຫນ້າຫີບພັນທະສັນຍາຂອງພຣະເຈົ້າ. ໂອເບັດເອໂດມ ກັບເຢຮີຢາ ເປັນຜູ້ເຝົ້າປະຕູຫີບພັນທະສັນຍາ.
25ດັ່ງນັ້ນ ດາວິດ, ບັນດາພວກເຖົ້າແກ່, ແລະ ພວກຜູ້ປົກຄອງຂອງອິສະຣາເອນ ແລະ
ຜູ້ບັນຊາກອງພັນໄດ້ໄປນຳເອົາຫີບພັນທະສັນຍາຂອງພຣະຢາເວຂຶ້ນມາຈາກເຮືອນຂອງ ໂອເບັດເອໂດມ ດ້ວຍຄວາມຊົມຊື່ນຍິນດີ. 26ຢູ່ມາ
ເມື່ອພຣະເຈົ້າໄດ້ຊ່ວຍຄົນເລວີຜູ້ຫາມຫີບພັນທະສັນຍາຂອງພຣະຢາເວໄປ, ພວກເຂົາກໍໄດ້ເອົາລູກງົວຖວາຍເປັນເຄື່ອງບູຊາເຈັດໂຕ ແລະ
ແກະຜູ້ເຈັດໂຕ.
27ດາວິດໄດ້ນຸ່ງເຄື່ອງຜ້າປ່ານເນື້ອລະອຽດ, ເຫມືອນກັບພວກຄົນເລວີທີ່ໄດ້ຫາມຫີບພັນທະສັນຍາ, ພວກນັກຮ້ອງ, ແລະ
ເກນານີຢາເປັນຜູ້ນຳດ້ານການຮ້ອງເພງໃຫ້ແກ່ນັກຮ້ອງ. ສ່ວນກະສັດດາວິດໄດ້ນຸ່ງເສື້ອເອໂຟດຜ້າປ່ານໂຕຫນຶ່ງ. 28ດັ່ງນີ້ແຫລະ
ຄົນອິສະຣາເອນທັງປວງໄດ້ນຳຫີບພັນທະສັນຍາຂອງພຣະຢາເວຂຶ້ນໄປດ້ວຍສຽງໂຫ່ຮ້ອງຍິນດີ, ແລະ ສຽງເປົ່າເຂົາສັດ, ສຽງແກ ແລະ
ສຽງແສ່ງພ້ອມດ້ວຍດີດພິນໃຫຍ່ ແລະ ພິນຄູ່.
29ແຕ່ຕໍ່ມາເມື່ອຫີບພັນທະສັນຍາຂອງພຣະຢາເວມາເຖິງເມືອງຂອງດາວິດແລ້ວ, ມີການລູກສາວຂອງຊາອູນ,
ໄດ້ເບິ່ງທາງປ່ອງຢ້ຽມເຫັນກະສັດດາວິດເຕັ້ນລຳ ແລະ ຊື່ນຊົມຍິນດີ. ນາງກໍມີໃຈຫມິ່ນປະຫມາດພະອົງ.

 generated on Tue Jun 17 19:01:42 2025

16 1พวกเຂົາໄດ້ນຳຫີບພັນທະສັນຍາຂອງພຣະເຈົ້າ ແລະເອົາເຂົ້າມາຕັ້ງໄວ້ພາຍໃນເຕັນ ຊຶ່ງດາວິດໄດ້ຈັດຕຽມໄວ້ສຳລັບຫີບນັ້ນ. ແລ
ພວກເຂົາໄດ້ຖວາຍເຄື່ອງເຜົາບູຊາ ແລະ ເຄື່ອງບູຊາເພື່ອຄວາມສາມັກຄີທັມຕໍ່ພຣະພັກພຣະເຈົ້າ. 2ເມື່ອດາວິດໄດ້ຖວາຍເຄື່ອງເຜົາບູຊາ
ແລະ ເຄື່ອງບູຊາເພື່ອຄວາມສາມັກຄີທັມສຳເລັດແລ້ວ, ພະອົງໄດ້ອວຍພອນປະຊາຊົນໃນພຣະນາມຂອງພຣະຢາເວ.
3ພະອົງໄດ້ແຈກເຂົ້າຈີ່ຄົນລະກ້ອນ, ແລະ ຊີ້ນຄົນລະສ່ວນ, ນ້ຳອະງຸ່ນ ແລະ ອະງຸ່ນແຫ້ງຄົນລະອັນແກ່ບັນດາປະຊາຊົນ ອິສະຣາເອນທັງຊາຍ
ແລະ ຍິງ.

4ດາວິດໄດ້ຕັ້ງຄົນເລວີບາງຄົນໃຫ້ເປັນຜູ້ບົວລະບັດຕໍ່ຫນ້າຫີບພັນທະສັນຍາຂອງພຣະຢາເວ, ແລະ ໃຫ້ເປັນການສະເຫລີມສະຫລອງ,
ລະນຶກເຖິງການຖວາຍໂມທະນາ, ແລະ ຍົກຍໍສັນຣະເສີນພຣະຢາເວ, ພຣະເຈົ້າຂອງອິສະຣາເອນ. 5ໂດຍແມ່ນອາສັບເປັນຫົວຫນ້າ,
ແລະເຊຄາຣີຢາເປັນຜູ້ຮອງ, ເຢອີເອນ, ເຊມີຣາໂມດ, ເຢຮີເອນ, ມັດຕີທີຢາ, ເອລີອາບ, ເບນາຢາ, ໂອເບັດເອໂດມ ແລະ ເຢອີເອນ.
ພວກເຂົາຈະຫລິ້ນພິນໃຫຍ່ ແລະ ພິນຄູ່. ສ່ວນອາສັບເປັນຄົນຕີແສ່ງ. 6ປະໂລຫິດເບນາຢາ ແລະ ຢາຮາຊີເອນໄດ້ເປົ່າແກຢູ່ເລື້ອຍ,
ຕໍ່ຫນ້າຫີບພັນທະສັນຍາຂອງພຣະເຈົ້າ.
7ແລ້ວໃນມື້ນັ້ນ ດາວິດໄດ້ກຳນົດເປັນເທື່ອທຳອິດມີການຮ້ອງເພງໂມທະນາຖວາຍແດ່ພຣະຢາເວໂດຍອາສັບ ແລ ພວກພີ່ນ້ອງຂອງເພິ່ນ.
8ຈົ່ງໂມທະນາຂອບຄຸນພຣະຢາເວ, ຈົ່ງຮ້ອງທູນອອກພຣະນາມຂອງພຣະອົງ,
ຈົ່ງໃຫ້ບັນດາພຣະຣາຊະກິດຂອງພຣະອົງປະກົດແຈ້ງທ່າມກາງຊົນຊາດທັງຫລາຍ. 9ຈົ່ງຮ້ອງເພງຖວາຍພຣະອົງ,
ຮ້ອງເພງສັນຣະເສີນຖວາຍພຣະອົງ; ຈົ່ງເວົ້າເຖິງການມະຫັດສະຈັນທັງຫມົດຂອງພຣະອົງ.
10ຈົ່ງອວດພຣະນາມອັນບໍຣິສຸດຂອງພຣະອົງ; ໃຫ້ຈິດໃຈຂອງບັນດາຜູ້ທີ່ສະແຫວງຫາພຣະຢາເວຊົມຊື່ນຍິນດີ. 11ຈົ່ງຊອກຫາພຣະຜູ້ເປັນເຈົ້າ
ແລະ ພຣະກຳລັງຂອງພຣະອົງ; ຊອກຫາພຣະພັກຂອງພຣະອົງເລື້ອຍໄປ.
12ຈົ່ງລະນຶກເຖິງການອັສະຈັນ ຊຶ່ງພຣະອົງໄດ້ຊົງກະທຳ, ການມະຫັດສະຈັນ ແລະ ຄຳພິພາກສາທັງປວງທີ່ອອກມາຈາກພຣະໂອດຂອງພຣະອົງ,
13ໂອ ທ່ານທັງຫລາຍຜູ້ເປັນເຊື້ອສາຍຂອງອິສະຣາເອນ ຜູ້ຮັບໃຊ້ຂອງພຣະອົງ, ຜູ້ເປັນລູກຫລານຂອງຢາໂຄບ, ທີ່ພຣະອົງໄດ້ຊົງເລືອກໄວ້.
14ພຣະອົງຄືພຣະຢາເວ, ພຣະເຈົ້າຂອງເຮົາ. ຄຳພິພາກສາທັງຫລາຍຂອງພຣະອົງກໍຢູ່ທົ່ວໄປໃນແຜ່ນດິນໂລກ.
15ຈົ່ງຈົດຈຳຄຳສັນຍາຂອງພຣະອົງຕະຫລອດໄປເປັນນິດ, ຈົ່ງຈົດຈຳພຣະທັມທີ່ພຣະອົງໄດ້ສັ່ງໄວ້ຕະຫລອດຫນຶ່ງພັນຊົ່ວຄົນ.
16ຄືຄຳສັນຍາຊຶ່ງພຣະອົງໄດ້ສັນຍາໄວ້ກັບອັບຣາຮາມ, ແລະ ຄຳປະຕິຍານ ຊຶ່ງໄດ້ໃຫ້ໄວ້ກັບອີຊາກ.
17ຊຶ່ງພຣະອົງໄດ້ຢືນຢັນໄວ້ອີກກັບຢາໂຄບໃຫ້ເປັນພຣະບັນຍັດສຳລັບອິສະຣາເອນ, ແລະ ໃຫ້ເປັນຄຳຫມັ້ນສັນຍາຕະຫລອດໄປເປັນິດ.
18ພຣະອົງໄດ້ກ່າວວ່າ, "ເຮົາຈະມອບແຜ່ນດິນການາອານໃຫ້ແກ່ເຈົ້າ ຊຶ່ງເປັນມໍຣະດົກຂອງພວກເຈົ້າ."
19ເຮົາໄດ້ກ່າວສິ່ງນີ້ ເມື່ອເຈົ້າທັງຫລາຍຍັງບໍ່ທັນມີຫລາຍຄົນຊຶ່ງມີຈຳນວນຫນ້ອຍກໍຈິງ, ແລະ ເປັນຄົນທີ່ອາໄສຢູ່ໃນແຜ່ນດິນນັ້ນ.
20ແລະພວກເຂົາໄດ້ເດີນທາງຈາກປະເທດນີ້ໄປປະເທດອື່ນ, ຈາກຣາຊະອານາຈັກນີ້ໄປຫາອີກຣາຊະອານາຈັກຫນຶ່ງ.
21ພຣະອົງບໍ່ຍອມໃຫ້ຜູ້ໃດບີບບັງຄັບພວກເຂົາ; ພຣະອົງໄດ້ນາບຂູ່ກະສັດຫລາຍອົງເພື່ອເຫັນແກ່ພວກເຂົາ. 22ພຣະອົງໄດ້ກ່າວວ່າ,
‘ຢ່າແຕະຕ້ອງບັນດາຜູ້ທີ່ເຮົາໄດ້ເຈີມຕັ້ງໄວ້, ແລະ ຢ່າເຮັດອັນຕະຣາຍແກ່ຜູ້ປະກາດພຣະທັມທັງຫລາຍຂອງເຮົາ.’
23ແຜ່ນດິນໂລກທັງຫມົດ, ຈົ່ງຮ້ອງເພງຖວາຍພຣະຢາເວ,ຈົ່ງປະກາດຄວາມພົ້ນຂອງພຣະອົງທຸກມື້.
24ຈົ່ງເວົ້າເຖິງສະຫງ່າຣາສີຂອງພຣະອົງໃນທ່າມກາງບັນດາປະຊາຊາດທັງຫລາຍ,
ເຖິງບັນດາກິຈະການທີ່ອັສະຈັນຂອງພຣະອົງທ່າມກາງບັນດາຊົນຊາດທັງປວງ.
25ເພາະພຣະຢາເວນັ້ນຍິ່ງໃຫຍ່ ແລະ ສົມຄວນທີ່ຈະສັນຣະເສີນຢ່າງໃຫຍ່ຫລວງ, ແລະ ພຣະອົງເປັນທີ່ຢຳເກງເຫນືອພະທັງປວງ.
26ເພາະພະທັງປວງຂອງຊົນຊາດທັງຫລາຍເປັນພຽງຮູບເຄົາຣົບ, ແຕ່ພຣະຢາເວໄດ້ເປັນຜູ້ສ້າງຟ້າສະຫວັນ. 27ຣິດທານຸພາບ ແລະ
ຣັສມີທີ່ຮຸ່ງເຮືອງກໍຢູ່ຕໍ່ພຣະພັກພຣະອົງ. ຣິດເດດ ແລະ ຄວາມຍິນດີກໍຢູ່ໃນສະຖານທີ່ປຣະທັບຂອງພຣະອົງ.
28ຈົ່ງພັນລະນາແກ່ພຣະຢາເວ, ຕະກູນແຫ່ງຊົນຊາດທັງຫລາຍເອີຍ, ຈົ່ງຖວາຍພຣະສະຫງ່າຣາສີ ແລະ ຣິດເດດແດ່ພຣະຢາເວ;
29ຈົ່ງຖວາຍສະຫງ່າຣາສີແຫ່ງນາມຊື່ຂອງພຣະອົງແດ່ພຣະຢາເວ. ຈົ່ງນຳເອົາເຄື່ອງຖວາຍມາ ແລະ ຈົ່ງເຂົ້າເຝົ້າຕໍ່ພຣະພັກພຣະອົງ.
ຈົ່ງກົ້ມກາບພຣະຢາເວໃນຣັດສະຫມີອັນຮຸ່ງເຮືອງແຫ່ງຄວາມບໍຣິສຸດຂອງພຣະອົງ.
30ຊາວໂລກທັງຫມົດເອີຍ ຈົ່ງຢ້ານຈົນຕົວສັ່ນຕໍ່ພຣະພັກພຣະອົງ. ໂລກຖືກສະຖາປະນາແລ້ວ; ຈະບໍ່ຖືກຫວັ່ນໄຫວ. 31ຂໍໃຫ້ຟ້າສະຫວັນຍິນດີ,
ແລະ ແຜ່ນດິນໂລກຊື່ນຊົມຍິນດີ; ໃຫ້ເວົ້າທ່າມກາງບັນດາປະຊາຊາດທັງຫລາຍວ່າ, "ພຣະຢາເວຊົງຄອບຄອງ."
32ຂໍໃຫ້ນ້ຳທະເລ, ແລະ ທຸກໆສິ່ງທີ່ຢູ່ໃນບ່ອນນັ້ນຮ້ອງດ້ວຍຄວາມຍິນດີ. ຂໍໃຫ້ທົ່ງນາທັງຫລາຍ ແລະ ທຸກສິ່ງທີ່ຢູ່ໃນບ່ອນນັ້ນ ຊົມຊື່ນຍິນດີ.
33ແລ້ວຕົ້ນໄມ້ທັງຫມົດໃນປ່າຄົງຮ້ອງອອກມາເປັນຄວາມຍິນດີຕໍ່ພຣະພັກພຣະຢາເວ, ເພາະວ່າ ພຣະອົງຈະສະເດັດມາ ເພື່ອພິພາກສາໂລກນີ້.
34ໂອ ຈົ່ງໂມທະນາຂອບພຣະຄຸນພຣະຢາເວ ເພາະຄວາມດີຂອງພຣະອົງດີປະເສີດ,
ເພາະຄວາມສັດຊື່ໃນພຣະສັນຍາຂອງພຣະອົງກໍດຳຣົງຢູ່ເປັນນິດ. 35ຈາກນັ້ນຈົ່ງກ່າວວ່າ,
"ຂ້າແດ່ພຣະເຈົ້າແຫ່ງຄວາມພົ້ນຂອງຂ້າພຣະອົງທັງຫລາຍ, ຂໍຊົງໄຖ່ຂ້າພຣະອົງທັງຫລາຍໃຫ້ຫລຸດພົ້ນ ແລະ
ຂໍຊົງໂຜດຊ່ວຍຂ້າພຣະອົງທັງປວງໃຫ້ພົ້ນຈາກປະຊາຊາດທັງປວງ,
ເພື່ອຂ້າພຣະອົງທັງຫລາຍຈະໄດ້ໂມທະນາຂອບພຣະຄຸນພຣະນາມອັນບໍຣິສຸດຂອງພຣະອົງ ແລະ ໄດ້ຍ້ອງຍໍພຣະສະຫງ່າຣາສີຂອງພຣະອົງ."
36ຂໍໃຫ້ພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ເປັນທີ່ສັນຣະເສີນຕັ້ງແຕ່ຄາວຜ່ານມາແລ້ວ ຈົນເຖິງຄາວພາຍຫນ້າສືບໆໄປເປັນນິດ.
ແລ້ວປະຊາຊົນທັງປວງໄດ້ກ່າວວ່າ “ອາແມນ” ແລະໄດ້ສັນຣະເສີນພຣະຢາເວ.
37ດາວິດຈຶ່ງໄດ້ປະອາສັບ ແລະ ພີ່ນ້ອງຂອງເພິ່ນຢູ່ໃນບ່ອນນັ້ນ ຕໍ່ຫນ້າຫີບພັນທະສັນຍາຂອງພຣະຢາເວ, ເພື່ອໃຫ້ບົວລະບັດຢູ່ຕໍ່ຫນ້າຫີບນັ້ນ,
ເຫມືອນວຽກປະຈຳວັນທີ່ຈະຕ້ອງເຮັດ. 38ພ້ອມທັງໂອເບັດ ເອໂດມ ແລະ ພີ່ນ້ອງຫົກສິບແປດຄົນຂອງເພິ່ນນຳ. ຝ່າຍໂອເບັດເອໂດມ,
ລູກຊາຍເຢດູທູນ ກັບໂຮສາໃຫ້ເປັນຄົນເຝົ້າປະຕູ. 39ດາວິດໄດ້ໃຫ້ປະໂລຫິດຊາໂດກ ກັບພີ່ນ້ອງຂອງເພິ່ນຜູ້ເປັນປະໂລຫິດ
ຢູ່ຫນ້າຫໍເຕັນຂອງພຣະຢາເວຊຶ່ງຢູ່ບ່ອນສູງໃນເມືອງກິເບໂອນ.

 generated on Tue Jun 17 19:01:42 2025

[40]ພວກເຂົາໄດ້ຈະຖວາຍເຄື່ອງເຜົາບູຊາແດ່ພຣະຢາເວເທິງແທ່ນເຄື່ອງເຜົາບູຊາໃນຕອນເຊົ້າ ແລະ ຕອນແລງສະເຫມີ,
ຕາມທີ່ໄດ້ບັນທຶກໄວ້ໃນພຣະບັນຍັດຂອງພຣະຢາເວ, ຊຶ່ງພຣະອົງໄດ້ສັ່ງແກ່ຊາວອິສະຣາເອນ. [41]ແລະຢູ່ກັບພວກເຂົາຍັງມີເຮມານ ແລະ ເຢດູທູນ,
ລວມທັງບັນດາຄົນທີ່ຖືກເລືອກຈາກຈຳນວນຄົນທີ່ຖືກເລືອກ, ບົ່ງຊື່ໄວ້ ໃຫ້ຖວາຍໂມທະນາພຣະຄຸນແດ່ພຣະຢາເວ,
ເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດນິຣັນດອນ.
[42]ເຮມານ ແລະ ເຢດູທູນໄດ້ມີຫນ້າທີ່ໃນການຖືແກ, ສາບ ແລະ ເຄື່ອງດົນຕຣີຕ່າງໆ ໃນການເພງອັນສັກສິດ.
ສ່ວນລູກຫລານຂອງເຢດູທູນໄດ້ຮັບແຕ່ງຕັ້ງໃຫ້ປະຈຳຢູ່ທີ່ປະຕູ. [43]ຈາກນັ້ນປະຊາຊົນທັງປວງຕ່າງກໍກັບເມືອເຮືອນຂອງຕົນທຸກຄົນ, ແລະ
ດາວິດກໍສະເດັດກັບເມືອ ເພື່ອອວຍພອນແດ່ຄອບຄົວຂອງພະອົງ.


generated on Tue Jun 17 19:01:42 2025

17 1ມັນໄດ້ເກີດຂຶ້ນຫລັງຈາກທີ່ກະສັດໄດ້ປະທັບໃນພະຣາຊະວັງຂອງພະອົງ, ດາວິດກ່າວກັບຜູ້ປະກາດພຣະທັມນາທານວ່າ “ເບິ່ງແມ່໋,
ເຮົາຢູ່ໃນເຮືອນທີ່ເຮັດດ້ວຍໄມ້ສົນສີດາ, ແຕ່ຫີບພັນທະສັນຍາຂອງພຣະຢາເວຢູ່ພາຍໃຕ້ຜ້າເຕັນ.”2ແລ້ວນາທານໄດ້ຕອບດາວິດວ່າ,
“ຂໍພະອົງໄດ້ເຮັດຕາມຄວາມປະສົງຂອງພະອົງເຖີດ, ເພາະພຣະເຈົ້າໄດ້ສະຖິດຢູ່ກັບພະອົງແລ້ວ.”

3ແຕ່ຢູ່ມາໃນຄືນມື້ນັ້ນເອງພຣະທັມຂອງພຣະເຈົ້າໄດ້ມາເຖິງນາທານວ່າ,4“ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ, ‘ພຣະຢາເວກ່າວດັ່ງນີ້ວ່າ:
ເຈົ້າຢ່າສ້າງພຣະວິຫານໃຫ້ເຮົາຢູ່.5ເພາະເຮົາບໍ່ເຄີຍຢູ່ໃນວິຫານນັບແຕ່ມື້ທີ່ເຮົາໄດ້ໃຫ້ພວກອິສະຣາເອນຂຶ້ນມາຈົນເຖິງທຸກມື້ນີ້.
ແຕ່ເຮົາໄດ້ຍ້າຍຈາກເຕັນນີ້ໄປເຕັນນັ້ນ ແລະ ຈາກຫໍເຕັນແຫ່ງນີ້ໄປຫໍເຕັນແຫ່ງນັ້ນແທນ.
6ໃນບ່ອນຕ່າງໆທີ່ເຮົາເຄື່ອນໄປມາກັບອິສະຣາເອນທັງຫມົດ,
ເຮົາບໍ່ໄດ້ເຄີຍເວົ້າຈັກຄຳກັບຜູ້ພິພາກສາຂອງອິສະຣາເອນຄົນໃດຄົນຫນຶ່ງທີ່ເຮົາໄດ້ສັ່ງໃຫ້ເຂົາລ້ຽງດູປະຊາຊົນຂອງເຮົາວ່າ,
“ເປັນຫຍັງເຈົ້າບໍ່ໄດ້ສ້າງວິຫານດ້ວຍໄມ້ສົນສີດາໃຫ້ແກ່ເຮົາ?"
7ເຫດສະນັ້ນ, ບັດນີ້ ເຈົ້າຈົ່ງກ່າວແກ່ດາວິດຜູ້ຮັບໃຊ້ຂອງເຮົາວ່າ, ‘ນີ້ຄືສິ່ງທີ່ພຣະຢາເວຈອມໂຍທາຊົງກ່າວ:
ເຮົາໄດ້ເອົາເຈົ້າອອກມາຈາກທົ່ງຫຍ້າ, ຈາກການຕາມຝູງແບ້ຝູງແກະ, ເພື່ອໃຫ້ເຈົ້າເປັນເຈົ້ານາຍປົກຄອງອິສະຣາເອນປະຊາຊົນຂອງເຮົາ.
8ເຮົາໄດ້ສະຖິດຢູ່ກັບເຈົ້າໃນທຸກບ່ອນທີ່ເຈົ້າໄປ ແລະ ໄດ້ຕັດບັນດາສັດຕຣູຂອງເຈົ້າອອກຕໍ່ຫນ້າເຈົ້າ, ແລະ ເຮົາໄດ້ເຮັດໃຫ້ເຈົ້າມີຊື່ສຽງໃຫຍ່ໂຕ,
ເຫມືອນກັບຊື່ສຽງຂອງຜູ້ຍິ່ງໃຫຍ່ທີ່ຢູ່ເທິງແຜ່ນດິນໃນໂລກ.
9ເຮົາຈະກຳນົດບ່ອນຢູ່ສຳລັບອິສະຣາເອນປະຊາຊົນຂອງເຮົາ, ເຮົາຈະປູກຝັງພວກເຂົາໄວ້, ເພື່ອພວກເຂົາຈະໄດ້ຢູ່ໃນບ່ອນຂອງພວກເຂົາເອງ
ແລະ ຈະບໍ່ຖືກກົດຂີ່ຂົ່ມເຫັງອີກຕໍ່ໄປ. ພວກລູກຂອງຄົນຊົ່ວຮ້າຍຈະບໍ່ມາປຸ້ນໂຈມຕີພວກເຂົາ, ຄືດັ່ງແຕ່ກ່ອນຜ່ານມາ,
10ຕັ້ງແຕ່ຄາວທີ່ເຮົາຕັ້ງຜູ້ພິພາກສາໄວ້ປົກຄອງອິສະຣາເອນປະຊາຊົນຂອງເຮົາ. ເຮົາຈະປາບປາມສັດຕຣູທັງຫມົດຂອງເຈົ້າລົງ.
ຫລາຍໄປກວ່ານັ້ນອີກ ເຮົາກ່າວແກ່ເຈົ້າວ່າ, ພຣະຢາເວ, ຈະໃຫ້ເຈົ້າມີເຊື້ອສາຍສືບໄປ.
11ເມື່ອມື້ທັງຫລາຍຂອງເຈົ້າຄົບແລ້ວ ເຈົ້າຕ້ອງໄປຢູ່ກັບບັນພະບຸຣຸດຂອງເຈົ້າ, ເຮົາຈະຍົກເຊື້ອສາຍຂອງເຈົ້າທີ່ມາພາຍຫລັງເຈົ້າຂຶ້ນ, ແລະ
ຜູ້ຊຶ່ງຈະເປັນລູກຊາຍຄົນຫນຶ່ງຂອງເຈົ້າເອງ, ເຮົາຈະສະຖາປະນາອານາຈັກຂອງລາວ.12ຜູ້ນັ້ນຈະເປັນຜູ້ສ້າງວິຫານສຳລັບເຮົາ, ແລະ
ເຮົາຈະໃຫ້ບັນລັງຂອງລາວຕັ້ງຫມັ້ນຄົງຢູ່ເປັນນິດ.
13ຝ່າຍເຮົາຈະເປັນພໍ່ຂອງລາວ, ແລະ ລາວຈະເປັນບຸດຂອງເຮົາ. ເຮົາຈະບໍ່ນຳຄວາມເມດຕາຂອງເຮົາອອກໄປຈາກລາວ,
ເຫມືອນຢ່າງທີ່ເຮົາໄດ້ເອົາອອກໄປຈາກຊາອູນ, ຄົນທີ່ຢູ່ກ່ອນເຈົ້ານັ້ນ.14ແຕ່ເຮົາຈະຕັ້ງລາວໄວ້ໃນວິຫານຂອງເຮົາ ແລະ
ໃນອານາຈັກຂອງເຮົາຕະຫລອດໄປເປັນນິດ,
ແລະບັນລັງຂອງລາວຈະຕັ້ງຫມັ້ນຄົງຢູ່ຕະຫລອດໄປ.’”15ນາທານໄດ້ກາບທູນດາວິດຕາມຖ້ອຍຄຳທັງປວງເຫລົ່ານີ້ ແລະ ຕາມນິມິດທັງຫມົດ.
16ແລ້ວກະສັດດາວິດກໍສະເດັດເຂົ້າໄປ ແລະ ນັ່ງລົງຕໍ່ພຣະພັກພຣະຢາເວ; ພະອົງກາບທູນວ່າ “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຢາເວ, ແລະ
ຂ້າພຣະອົງແມ່ນຜູ້ໃດນໍ ແລະ ເຊື້ອສາຍຂອງຂ້າພຣະອົງທີ່ພຣະອົງໄດ້ນຳມາໄກຈົນເຖິງບ່ອນນີ້?
17ສິ່ງນີ້ເປັນຂອງເລັກນ້ອຍໃນສາຍພຣະເນດຂອງພຣະອົງ, ເພາະພຣະອົງໄດ້ກ່າວເຖິງເຊື້ອສາຍຂອງຂ້າໃຊ້ຂອງພະອົງໃນອະນາຄົດອັນໄກນັ້ນ,
ແລະ ໄດ້ສຳແດງເຖິງຄົນລຸ້ນຕໍ່ມາ, ຂ້າແດ່ພຣະຢາເວພຣະຜູ້ເປັນພຣະເຈົ້າ.18ແລະ ດາວິດຈະກ່າວທູນອີກວ່າ,
ຂ້ານ້ອຍຈະກ່າວສິ່ງໃດຕໍ່ພຣະອົງໄດ້ອີກ? ເພາະພຣະອົງຮູ້ຈັກຜູ້ຮັບໃຊ້ຂອງພຣະອົງ. ພຣະອົງຊົງໃຫ້ກຽດແກ່ຜູ້ຮັບໃຊ້ຂອງພຣະອົງ.
19ຂ້າແດ່ພຣະຢາເວ, ພຣະອົງໄດ້ກະທຳການອັນຍິ່ງໃຫຍ່ທັງຫມົດເຫລົ່ານີ້, ແລະ ເພື່ອເຫັນແກ່ຜູ້ຮັບໃຊ້ຂອງພຣະອົງ ແລະ
ຕາມນ້ຳພຣະທັຍຂອງພຣະອົງເອງ ເພື່ອຈະເຮັດໃຫ້ສິ່ງທີ່ຍິ່ງໃຫຍ່ນີ້ເປັນທີ່ຮູ້ກັນທົ່ວໄປ.20ຂ້າແດ່ພຣະຢາເວ, ບໍ່ມີຜູ້ໃດເທົ່າທຽມກັບພຣະອົງ, ແລະ
ບໍ່ມີພະອື່ນໃດນອກຈາກພຣະອົງ, ຕາມທີ່ຂ້າພຣະອົງທັງຫລາຍໄດ້ຍິນກັບຫູຂອງຂ້າພຣະອົງ.
21ບໍ່ມີປະຊາຊາດໃດໆໃນໂລກທີ່ເຫມືອນກັບປະຊາຊົນອິສະຣາເອນຂອງພຣະອົງ, ແມ່ນພຽງຊາດດຽວທີ່ຢູ່ເທິງແຜ່ນດິນໂລກ
ທີ່ພຣະອົງຊົງໂຜດຊ່ວຍອອກຈາກເອຢິບໃຫ້ເປັນປະຊາຊົນຂອງພຣະອົງ,
ເພື່ອຈະເຮັດໃຫ້ພຣະນາມຂອງພຣະອົງຊ່າລືໄປດ້ວຍກິຈະການທີ່ຍິ່ງໃຫຍ່ອັນຫນ້າຢ້ານ ແລະ ຢຳເກງ?
ໂດຍຂັບໄລ່ປະຊາຊາດທັງຫລາຍອອກໄປໃຫ້ພົ້ນຕໍ່ຫນ້າປະຊາຊົນຂອງພຣະອົງ, ຜູ້ຊຶ່ງພຣະອົງໄດ້ໄຖ່ອອກມາຈາກປະເທດເອຢິບນັ້ນ.
22ພຣະອົງໄດ້ຊົງຖືເອົາອິສະຣາເອນມາເປັນປະຊາຊົນຂອງພຣະອົງຕະຫລອດໄປເປັນນິດ, ແລະ ຂ້າແດ່ພຣະຢາເວ,
ພຣະອົງກາຍເປັນພຣະເຈົ້າຂອງພວກເຂົາ.23ບັດນີ້, ຂ້າແດ່ພຣະຢາເວ, ຂໍໃຫ້ພຣະທັມຊຶ່ງພຣະອົງໄດ້ກ່າວໄວ້ກ່ຽວກັບຜູ້ຮັບໃຊ້ຂອງພຣະອົງ ແລະ
ກ່ຽວກັບເຊື້ອສາຍຂອງລາວ ຈົ່ງຕັ້ງຫມັ້ນຄົງຢູ່ສືບໄປເປັນນິດ. ຂໍພຣະອົງຊົງໂຜດກະທຳຕາມທີ່ພຣະອົງກ່າວໄວ້ແລ້ວນັ້ນເຖີດ.
24ຂໍໃຫ້ການນັ້ນຕັ້ງຫມັ້ນຄົງຢູ່ ແລະ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ຍົກຍ້ອງສັນຣະເສີນຕະຫລອດໄປເປັນນິດ, ແລະ ຂໍໃຫ້ພວກເຂົາເວົ້າວ່າ
‘ພຣະຢາເວຈອມໂຍທາເປັນພຣະເຈົ້າຂອງອິສະຣາເອນ,' ໃນເວລາຂອງຂ້າພຣະອົງຄື ດາວິດ,
ຜູ້ຮັບໃຊ້ຂອງພຣະອົງຕັ້ງຫມັ້ນຄົງຢູ່ຕໍ່ພຣະພັກຂອງພຣະອົງເຖີດ.
25ເພາະວ່າ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ, ພຣະອົງໄດ້ສຳແດງແກ່ຜູ້ຮັບໃຊ້ຂອງພຣະອົງວ່າ ພຣະອົງຈະຕັ້ງເຊື້ອສາຍໃຫ້ລາວ. ເຫດສະນັ້ນ,
ຜູ້ຮັບໃຊ້ຂອງພຣະອົງຈຶ່ງມີຄວາມກ້າຫານທີ່ຈະອະທິຖານຕໍ່ພຣະພັກພຣະອົງ.26ບັດນີ້, ຂ້າແດ່ພຣະຢາເວ, ພຣະອົງເປັນພຣະເຈົ້າ, ແລະ
ພຣະອົງໄດ້ສັນຍາສິ່ງທີ່ດີນີ້ໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ:27ເພາະສະນັ້ນ
ບັດນີ້ຂໍໃຫ້ເປັນທີ່ພໍພຣະທັຍພຣະອົງທີ່ຈະໄດ້ອວຍພຣະພອນແກ່ເຊື້ອສາຍຂອງຜູ້ຮັບໃຊ້ຂອງພຣະອົງ,
ເພື່ອເຊື້ອສາຍນັ້ນຈະດຳຣົງຢູ່ຕໍ່ພຣະພັກພຣະອົງຕະຫລອດໄປເປັນນິດ. ເພາະວ່າ ພຣະຢາເວ, ໄດ້ອວຍພຣະພອນໃຫ້ແກ່ພວກເຂົາ, ແລະ
ພວກເຂົາຈະມີພຣະພອນສືບເປັນໄປນິດ.”


generated on Tue Jun 17 19:01:42 2025

18 [1]ຢູ່ຕໍ່ມາດາວິດໄດ້ໂຈມຕີພວກຟີລິສະຕິນ ແລະ ໄດ້ປາບປາມພວກເຂົາ. ພ້ອມທັງຍຶດເມືອງກັດ ແລະ
ຊົນນະບົດຂອງເມືອງນັ້ນຈາກມືຂອງພວກຟີລິສະຕິນ.[2]ພະອົງໄດ້ໂຈມຕີຄົນໂມອາບ, ແລະ ຄົນໂມອາບໄດ້ກາຍເປັນຜູ້ຮັບໃຊ້ຂອງດາວິດ ແລະ
ນໍາເອົາເຄື່ອງຖວາຍມາຖວາຍໃຫ້ແກ່ດາວິດ.

[3]ດາວິດໄດ້ໂຈມຕີຮາດັດເອເຊີ, ກະສັດໂຊບາໃນເມືອງຮາມັດ, ຂະນະທີ່ພະອົງກໍາລັງສະເດັດໄປຕັ້ງອໍານາດປົກຄອງຂອງພະອົງທີ່ແມ່ນໍ້າເອຟຣາດ.
[4]ດາວິດໄດ້ຍຶດລົດຮົບຫນຶ່ງພັນຄັນພ້ອມທັງທະຫານມ້າເຈັດພັນຄົນ, ແລະ ທະຫານຮາບສອງຫມື່ນຄົນອອກຈາກພະອົງ.
ດາວິດໄດ້ຕັດເອັນຂາມ້າຮົດຮົບທັງຫມົດ, ແຕ່ດາວິດໄດ້ຍຶດເອົາຣົດມ້າໄວ້ຫນຶ່ງຮ້ອຍຄັນ.
[5]ເມື່ອຄົນຊີເຣຍແຫ່ງເມືອງດາມາເຊໄດ້ມາຊ່ວຍຮາດັດເອເຊີກະສັດແຫ່ງເມືອງໂຊບາ, ດາວິດໄດ້ປະຫານຄົນຊີເຣຍສອງຫມື່ນສອງພັນຄົນ.
[6]ແລ້ວດາວິດໄດ້ຕັ້ງກອງທະຫານປະຈໍາປ້ອມໄວ້ໃນຊີເຣຍແຫ່ງເມືອງດາມັສະກັດ, ແລະ ຄົນຊີເຣຍໄດ້ເປັນຜູ້ຮັບໃຊ້ຂອງດາວິດ ແລະ
ພວກເຂົາເປັນຜູ້ນໍາເອົາເຄື່ອງຖວາຍມາຖວາຍແກ່ພະອົງ. ພຣະຢາເວໄດ້ປຣະທານຊັຍຊະນະໃຫ້ແກ່ພະອົງໃນທຸກທີ່ທຸກບ່ອນທີ່ພະອົງໄປ.
[7]ດາວິດໄດ້ຍຶດໂລ່ທອງຄໍາທີ່ເປັນຂອງຜູ້ຮັບໃຊ້ຂອງຮາດັດເອເຊີ ແລະ ໄດ້ນໍາມານະຄອນເຢຣູຊາເລັມ.
[8]ດາວິດໄດ້ຍຶດເອົາທອງເຫລືອງເປັນຈໍານວນຫລາຍຈາກເມືອງຕິບຮາດ ແລະ ຈາກເມືອງກູນທີ່ເປັນຫົວເມືອງຂອງຮາດັດເອເຊີ,
ຊຶ່ງໂຊໂລໂມນໄດ້ໃຊ້ເຮັດຊາມທະເລທອງເຫລືອງ, ແລະ ເສົາທັງສອງ ພ້ອມກັບເຄື່ອງໃຊ້ທີ່ເປັນທອງເຫລືອງ.
[9]ເມື່ອໂຕຍ, ກະສັດແຫ່ງເມືອງຮາມັດ, ໄດ້ຍິນວ່າດາວິດໄດ້ໂຈມຕີກອງທັບທັງຫມົດຂອງຮາດັດເອເຊີ ກະສັດໂຊບາແລ້ວ,
[10]ໂຕຍໄດ້ໃຊ້ໂຢຣາມລູກຊາຍຂອງພະອົງໄປເຝົ້າກະສັດດາວິດ ເພື່ອຈະຄໍານັບ ແລະ ຖວາຍພະພອນພະອົງ, ເພາະດາວິດໄດ້ສູ້ຮົບຮາດາເດເຊ
ແລະ ເອົາຊະນະລາວ, ເພາະວ່າຮາດາເດເຊໄດ້ສູ້ຮົບກັບໂຕຍ. ຮັດໂດຣາມໄດ້ສົ່ງເຄື່ອງຕ່າງໆ ທີ່ເຮັດດ້ວຍທອງຄໍາ, ດ້ວຍເງິນ ແລະ
ດ້ວຍທອງເຫລືອງໄປຖວາຍພະອົງ.[11]ກະສັດດາວິດໄດ້ຖວາຍສິ່ງເຫລົ່ານີ້ແກ່ພຣະຢາເວ, ພ້ອມກັບເງິນ ແລະທອງຄໍາ
ຊຶ່ງພະອົງໄດ້ນໍາມາຈາກປະຊາຊາດທັງປວງເຊັ່ນ: ຈາກເອໂດມ, ໂມອາບ, ລູກຫລານອໍາໂມນ, ຄົນຟີລິສະຕິນ ແລະ ຈາກພວກອໍາມາເລັກ.
[12]ອາບີຊາຍລູກຊາຍນາງເຊຣູຢາໄດ້ໂຈມຕີພວກເອໂດມຫນຶ່ງຫມື່ນແປດພັນຄົນໃນຮ່ອມພູເຂົາເກືອ.[13]ພະອົງຕັ້ງກອງທັບທະຫານໄວ້ໃນເອໂດມ,
ແລະ ຊາວເອໂດມທັງຫມົດໄດ້ກາຍມາເປັນຄົນຮັບໃຊ້ຂອງດາວິດ. ພຣະຢາເວໄດ້ປະທານຊັຍຊະນະແກ່ດາວິດໃນທຸກທີ່ທຸກບ່ອນທີ່ພະອົງໄປ
ບໍ່ວ່າພະອົງຈະສະເດັດໄປບ່ອນໃດກໍຕາມ.
[14]ດາວິດຈຶ່ງໄດ້ປົກຄອງອິສະຣາເອນທັງຫມົດ, ແລະ ພະອົງໄດ້ໃຫ້ຄວາມຍຸຕິທັມກັບຄວາມທ່ຽງທັມແກ່ປະຊາຊົນຂອງພະອົງທຸກຄົນ.
[15]ໂຢອາບລູກຊາຍນາງເຊຣູຢາເປັນຜູ້ບັນຊາການກອງທັບ, ແລະ ເຢໂຮຊາຟັດລູກຊາຍອາຮີລຸດເປັນເຈົ້າກົມເອກກະສານຕ່າງໆ.
[16]ຊາໂດກລູກຊາຍອາຮີຕູບ ແລະ ອາບີເມເລັກລູກຊາຍອາບີອາທາເປັນປະໂລຫິດ, ແລະ ຊາວະຊາເປັນເລຂາ.
[17]ເບນາຢາລູກຊາຍເຢໂຮຢາດາເປັນຫົວຫນ້າຊັ້ນຄົນເຫນືອຊາວເກເຣັດ ແລະ ຄົນເປເລດ, ແລະ
ບັນດາລູກຊາຍຂອງດາວິດກໍເປັນຫົວຫນ້າໃນຣາຊະການຂອງກະສັດ.

 generated on Tue Jun 17 19:01:42 2025

19 [1]ຢູ່ຕໍ່ມາພາຍຫລັງຈາກເຫດການນີ້ ນາຮາດ, ກະສັດຂອງຄົນອຳໂມນກໍສິ້ນພະຊົນ, ແລະ ລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນ.
[2]ດາວິດໄດ້ກ່າວວ່າ, "ເຮົາຈະສະແດງຄວາມເມດຕາຕໍ່ຮານູນລູກຊາຍຂອງນາຮາດ, ເພາະວ່າພໍ່ຂອງເພິ່ນໄດ້ສະແດງຄວາມເມດຕາຕໍ່ເຮົາ."
ດາວິດຈຶ່ງໄດ້ສົ່ງຜູ້ສົ່ງຂ່າວໄປເລົ້າໂລມໃຈເພິ່ນກ່ຽວກັບພໍ່ຂອງເພິ່ນທີ່ຕາຍໄປ.
ຂ້າຣາຊະການຂອງດາວິດກໍໄດ້ໄປຮອດຮານູນໃນແຜ່ນດິນຂອງລູກຫລານອຳໂມນ ເພື່ອຈະເລົ້າໂລມໃຈເພິ່ນ.
[3]ແຕ່ບັນດາເຈົ້ານາຍຂອງລູກຫລານອຳໂມນທູນຮານູນວ່າ, "ທ່ານຄິດວ່າກະສັດດາວິດສົ່ງຜູ້ເລົ້າໂລມໃຈມາຫາທ່ານ
ເພາະນັບຖືບິດາຂອງທ່ານຢ່າງນັ້ນບໍ? ຂ້າຣາຊະການຂອງດາວິດມາຫາທ່ານເພື່ອຄົ້ນຫາ, ທຳລາຍ ແລະ ສອດແນມແຜ່ນດິນນີ້ບໍ່ແມ່ນບໍ?"

[4]ດັ່ງນັ້ນ, ຮານູນຈຶ່ງຈັບຂ້າຣາຊະການຂອງດາວິດ ແລະ ແຖຂົນຂອງພວກເຂົາ, ຕັດເຄື່ອງນຸ່ງພວກເຂົາຜ່າກາງຈົນຮອດສະໂພກ, ແລະ
ປ່ອຍພວກເຂົາກັບໄປ.[5]ເມື່ອມີບາງຄົນໄປທູນດາວິດເຖິງເລື່ອງຄົນເຫລົ່ານັ້ນ, ພະອົງກໍໄດ້ໃຊ້ໃຫ້ໄປຮັບເອົາພວກເຂົາ, ເພາະຄົນເຫລົ່ານັ້ນ
ອັບອາຍຫລາຍ. ກະສັດກ່າວວ່າ, "ຈົ່ງພັກຢູ່ທີ່ເມືອງເຢຣິໂກຈົນກວ່າໜວດຂອງທ່ານທັງຫລາຍຈະປົ່ງຂຶ້ນໃຫມ່ ແລ້ວຈຶ່ງຄ່ອຍກັບຄືນມາ."
[6]ເມື່ອລູກຫລານອຳໂມນເຫັນວ່າ ພວກເຂົາໄດ້ເຮັດຜິດຕໍ່ດາວິດ, ຮານູນ ແລະ ລູກຫລານອຳໂມນ ຈຶ່ງສົ່ງເງິນຫນຶ່ງພັນຕະລັນໄປຈ້າງຣົດຮົບ ແລະ
ທະຫານມ້າຈາກປະເທດເມໂຊໂປຕາເມຍ, ຈາກອາຣາມ, ມາອາກາ, ແລະຈາກໂຊບາ.[7]ພວກເຂົາໄດ້ຈ້າງຣົດຮົບສາມຫມື່ນສອງພັນຄັນ ແລະ
ກະສັດແຫ່ງເມືອງມາອາກາກັບກອງທັບຂອງຕົນ, ພວກເຂົາໄດ້ຕັ້ງຄ້າຍພັກຢູ່ຕໍ່ຫນ້າເມືອງເມເດບາ.
ລູກຫລານອຳໂມນກໍທ້ອນໂຮມກັນຈາກເມືອງຕ່າງໆ, ແລະ ໄດອອກມາເພື່ອສູ້ຮົບ.
[8]ເມື່ອດາວິດໄດ້ຍິນເລື່ອງນັ້ນ, ພະອົງຈຶ່ງໃຊ້ໂຢອາບ ແລະ ກອງທະຫານທີ່ເກັ່ງກ້າທັງຫມົດອອກໄປ.[9]ແລະ
ບັນດາຄົນອຳໂມນກໍອອກມາຕັ້ງແຖວສູ້ຮົບຢູ່ປະຕູເມືອງ, ໃນຄະນະທີ່ກະສັດທັງຫລາຍ ຜູ້ທີ່ມາກໍຍົກຍ້າຍຕົນເອງໄປຢູ່ໃນທົ່ງນາ.
[10]ເມື່ອໂຢອາບເຫັນວ່າການເສິກນັ້ນໄດ້ຕັ້ງຖານທັບຢູ່ທາງຂ້າງຫນ້າ ແລະ ຂ້າງຫລັງ,
ເພິ່ນຈຶ່ງເອົາຄົນທີ່ກ້າຫານຈາກຊາວອິສະຣາເອນທີ່ໄດ້ຄັດເລືອກໄວ້ແລ້ວ ແລະ ຈັດທັບເຂົ້າໄປຕໍ່ສູ້ຄົນຊີເຣຍ.[11]ສ່ວນຄົນຂອງເພິ່ນທີ່ຍັງເຫລືອຢູ່,
ເພິ່ນກໍມອບໄວ້ໃນການບັງຄັບບັນຊາຂອງອາບີຊາຍນ້ອງຊາຍຂອງຕົນ, ແລະ ຄົນເຫລົ່ານັ້ນກໍຈັດຕຽມເຂົ້າສູ້ຮົບກັບລູກຫລານອຳໂມນ.
[12]ໂຢອາບໄດ້ກ່າວວ່າ "ຖ້າຄົນຊີເຣຍມີກຳລັງແຮງກວ່າກຳລັງຂອງເຮົາ ແລ້ວອາບີຊາຍ, ເຈົ້າຈົ່ງຊ່ວຍເຮົາ.
ແຕ່ຖ້າກຳລັງຄົນອຳໂມນເຫນືອກວ່າກຳລັງຂອງເຈົ້າ, ແລ້ວເຮົາຈະມາ ແລະ ຊ່ວຍເຈົ້າ.[13]ຈົ່ງມີຄວາມກ້າຫານເຖີດ, ແລະ
ໃຫ້ເຮົາສະແດງວ່າພວກເຮົາເອງເຂັ້ມແຂງ ເພື່ອປະຊາຊົນຂອງເຮົາ ແລະ ເພື່ອຫົວເມືອງຕ່າງໆຂອງພຣະເຈົ້າຂອງເຮົາ,
ຂໍພຣະຢາເວໄດ້ກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະອົງເຖີດ."
[14]ດັ່ງນັ້ນ ໂຢອາບ ແລະ ທະຫານຜູ້ທີ່ຢູ່ກັບເພິ່ນຈຶ່ງໄດ້ຫຍັບເຂົ້າໄປໃກ້ຂ້າງຫນ້າຄົນຊີເຣຍ, ເພື່ອສູ້ຮົບ ແລະ
ພວກເຂົາກໍແຕກຫນີໄປຕໍ່ຫນ້າກອງທັບອິສະຣາເອນ.[15]ເມື່ອທະຫານຂອງອຳໂມນເຫັນວ່າຄົນຊີເຣຍໄດ້ປົບຫນີໄປແລ້ວ,
ພວກເຂົາກໍປົບຫນີໄປຕໍ່ຫນ້າອາບີຊາຍນ້ອງຊາຍຂອງໂຢອາບດ້ວຍ ແລະ ເຂົ້າໄປໃນເມືອງ. ແລ້ວໂຢອາບໄດ້ກັບໄປຈາກປະຊາຊົນອຳໂມນ ແລະ
ກໍໄປນະຄອນເຢຣູຊາເລັມ.
[16]ແຕ່ເມື່ອຄົນຊີເຣຍເຫັນວ່າພວກເຂົາພ່າຍແພ້ຕໍ່ຊາວອິສະຣາເອນ, ພວກເຂົາຈຶ່ງສົ່ງຜູ້ຮັບໃຊ້ໄປຫາຄົນຊີເຣຍ ຊຶ່ງຢູ່ຟາກແມ່ນ້ຳເບື້ອງນັ້ນ,
ມີໂຊຟາກ ຜູ້ບັງຄັບບັນຊາກອງທັບຂອງຮາດັດເອເຊີເປັນຫົວຫນ້ານຳພາພວກເຂົາ.[17]ແລະເມື່ອມີຄົນກາບທູນດາວິດ,
ພະອົງກໍໄດ້ທ້ອນໂຮມອິສະຣາເອນທັງຫມົດເຂົ້າກັນ, ແລະຂ້ວາມແມ່ນ້ຳຢໍແດນ, ແລະ ມາຫາພວກເຂົາ.
ພະອົງໄດ້ຈັດຕຽມທັບເຂົ້າຕໍ່ສູ້ກັບຄົນຊີເຣຍ, ພວກເຂົາກໍເລີ່ມຕໍ່ສູ້ກັບພະອົງ.
[18]ຄົນຊີເຣຍກໍຫນີໄປຕໍ່ຫນ້າຊາວອິສະຣາເອນ, ແລະ ດາວິດໄດ້ຂ້າຄົນຊີເຣຍ ຄືຄົນຂັບຣົດຮົບເຈັດພັນຄົນ ແລະ ທະຫານຣາບສີ່ຫມື່ນຄົນ.
ພະອົງໄດ້ຊົງຂ້າໂຊຟາກ, ຜູ້ບັນຊາການກອງທັບຂອງພວກເຂົາ.[19]ເມື່ອເຫລົ່າກະສັດທັງຫລາຍ
ຜູ້ຊຶ່ງເປັນຜູ້ຮັບໃຊ້ຂອງຮາດັດເອເຊີເຫັນວ່າພວກເຂົາພ່າຍແພ້ຕໍ່ອິສະຣາເອນແລ້ວ, ລາວຈຶ່ງຍອມເຮັດສັນຕິພາບກັບດາວິດ ແລະ
ເປັນຜູ້ຮັບໃຊ້ຂອງພະອົງ. ດັ່ງນັ້ນຄົນຊີເຣຍ ຈຶ່ງບໍ່ຍິນຍອມຊ່ວຍລູກຫລານອຳໂມນອີກຕໍ່ໄປ.

20 [1]ຢູ່ມາພໍຫມົດປີແລ້ວ, ໃນເວລາທີ່ບັນດາກະສັດຍົກກອງທັບອອກໄປສູ້ຮົບ,
ໂຢອາບກໍນໍາກໍາລັງກອງທັບໄປກວາດລ້າງແຜ່ນດິນຂອງລູກຫລານອໍາໂມນ. ລາວໄດ້ປິດລ້ອມເມືອງລັບບາໄວ້
ແຕ່ດາວິດຄ້າງຢູ່ທີ່ນະຄອນເຢຣູຊາເລັມ. ໂຢອາບກໍໄດ້ໂຈມຕີ ແລະ ທໍາລາຍເມືອງລັບບາ.

[2]ດາວິດໄດ້ຖອດມົງກຸດອອກຈາກຫົວຂອງກະສັດຂອງພວກເຂົາ, ພະອົງຮູ້ວ່າມົງກຸດນັ້ນມີທອງຄໍາຫນັກຫນຶ່ງຕະລັນ, ແລະ ມີເພັດພອຍຕ່າງໆ.
ຕໍ່ມາພວກເຂົາໄດ້ເອົາມົງກຸດນັ້ນສວມເທິງຫົວຂອງກະສັດດາວິດ, ແລະພະອົງໄດ້ຍຶດເອົາສິ່ງຂອງຈາກເມືອງນັ້ນຢ່າງຫລວງຫລາຍ.
[3]ພະອົງໄດ້ນໍາປະຊາຊົນທີ່ຢູ່ໃນເມືອງນັ້ນອອກມາ ແລະ ບັງຄັບພວກເຂົາໃຫ້ເຮັດວຽກຫນັກຢູ່ກັບເລື່ອຍ, ຈົກ ແລະ ຂວານ.
ກະສັດດາວິດໄດ້ເຮັດເຊັ່ນນີ້ກັບບັນດາເມືອງທັງຫມົດຂອງລູກຫລານອໍາໂມນໃຫ້ເຮັດວຽກກໍາມະກອນນີ້.
ແລ້ວດາວິດກັບກອງທັບທັງຫລາຍກໍກັບຄືນໄປນະຄອນເຢຣູຊາເລັມ.
[4]ຢູ່ມາພາຍຫລັງທີ່ເກີດສົງຄາມຂຶ້ນກັບຄົນຟີລິສະຕິນທີ່ເມືອງເກເຊ. ແລ້ວສິບເບກາຍເຊື້ອສາຍຮູຊາຍໄດ້ຂ້າສິບປາຍ,
ຜູ້ເປັນລູກຫລານຂອງຄົນເລຟາອິມ ແລະ ຄົນຟີລິສະຕິນກໍຖືກປາບປາມ.[5]ແລະ ເກີດມີສົງຄາມກັບຄົນຟີລິສະຕິນທີ່ເມືອງໂກບ,
ແລ້ວເອນຮະນັນລູກຊາຍຢາອີໄດ້ຂ້າລາມີລູກຊາຍຂອງໂກລີຢາດຊາວກັດ, ຜູ້ມີຫອກທີ່ມີດ້າມໃຫຍ່ເທົ່າໄມ້ກໍາພັນຕໍາແຜ່ນ.
[6]ມີສົງຄາມທີ່ເມືອງກັດອີກ ມີຊາຍຄົນຫນຶ່ງຮູບຮ່າງໃຫຍ່ໂຕ ຜູ້ທີ່ມີມືເບື້ອງລະຫົກນິ້ວ ແລະ ນິ້ວຕີນເບື້ອງລະຫົກນິ້ວ,
ລາວເປັນລູກຊາຍຂອງຄົນເລຟາອິມດ້ວຍ.[7]ເມື່ອລາວໄດ້ທ້າທາຍທະຫານຂອງອິສະຣາເອນ, ໂຢນາທານລູກຊາຍຊີເມອີ
ອ້າຍຂອງດາວິດກໍໄດ້ປະຫານລາວ.[8]ຄົນເຫລົ່ານີ້ເປັນບັນດາເຊື້ອສາຍທັງຫລາຍຂອງຄົນເລຟາອິມເມືອງກາດ, ແລະ
ລາວໄດ້ລົ້ມຕາຍດ້ວຍມືຂອງກະສັດດາວິດ ແລະ ດ້ວຍມືຜູ້ຮັບໃຊ້ຂອງພະອົງ.


generated on Tue Jun 17 19:01:42 2025

21 [1]ຊາຕານໄດ້ລຸກຂຶ້ນຕໍ່ສູ້ອິສະຣາເອນ ແລະ ດົນໃຈໃຫ້ດາວິດນັບຈຳນວນອິສະຣາເອນ.[2]ດາວິດຈຶ່ງກ່າວກັບໂຢອາບ ແລະ
ຜູ້ບັງຄັບບັນຊາກອງທັບວ່າ, "ຈົ່ງໄປນັບຈຳນວນຄົນອິສະຣາເອນ ຕັ້ງແຕ່ເມືອງເບເອເຊບາຮອດເມືອງດານ ແລ້ວນຳມາລາຍງານໃຫ້ເຮົາ
ເພື່ອຈະໄດ້ຮູ້ຈຳນວນທັງຫມົດຂອງພວກເຂົາ."[3]ແຕ່ໂຢອາບທູນວ່າ, "ຂໍພຣະຢາເວໄດ້ເພີ່ມປະຊາຊົນຂອງພຣະອົງອີກຮ້ອຍເທົ່າ
ພ້ອມກັບສິ່ງຂອງທີ່ມີຢູ່ແລ້ວ. ຂ້າແດ່ກະສັດເຈົ້ານາຍຂອງຂ້າພຣະອົງ,
ປະຊາຊົນທັງຫມົດນີ້ເປັນຜູ້ຮັບໃຊ້ຂອງເຈົ້ານາຍຂອງຂ້າພຣະອົງບໍ່ແມ່ນບໍ? ເປັນຫຍັງເຈົ້ານາຍຂອງຂ້າພຣະອົງຈຶ່ງສັ່ງການເຊັ່ນນີ້?
ເຫດໃດພຣະອົງຈຶ່ງໄດ້ນຳການລະເມີດມາສູ່ອິສະຣາເອນ?"

[4]ແຕ່ໂຢອາບຂັດຄຳສັ່ງຂອງກະສັດບໍ່ໄດ້. ໂຢອາບຈຶ່ງຈາກໄປ ແລະ ໄປທົ່ວອິສະຣາເອນທັງຫມົດ ແລະ ກັບມາເຖິງເຢຣູຊາເລັມ.
[5]ແລ້ວໂຢອາບໄດ້ລາຍງານຈຳນວນບັນຊີຜູ້ຊາຍທີ່ເປັນນັກຮົບທີ່ນັບໄດ້ໃຫ້ແກ່ດາວິດ.
ໃນອິສະຣາເອນທັງຫມົດມີຫນຶ່ງລ້ານຫນຶ່ງແສນຄົນທີ່ຖືດາບ. ໃນຢູດາມີສີ່ແສນເຈັດຫມື່ນຄົນທີ່ຖືດາບ.
[6]ແຕ່ວ່າເພິ່ນບໍ່ໄດ້ນັບພວກເລວີ ແລະ ເບັນຢາມິນໃນທ່າມກາງພວກເຂົາ, ເພາະວ່າຄຳສັ່ງຂອງກະສັດເປັນທີ່ຫນ້າກຽດຊັງແກ່ໂຢອາບ.
[7]ພຣະເຈົ້າບໍ່ໄດ້ພໍພຣະທັຍໃນເລື່ອງນີ້, ພຣະອົງຈຶ່ງໄດ້ລົງໂທດຊາວອິສະຣາເອນ.[8]ແລະ ດາວິດກາບທູນພຣະເຈົ້າວ່າ,
"ຂ້າພຣະອົງໄດ້ເຮັດບາບອັນຍິ່ງໃຫຍ່ໃນການທີ່ຂ້າພຣະອົງໄດ້ເຮັດໃນສິ່ງນີ້.
ຂ້າພຣະອົງອ້ອນວອນຕໍ່ພຣະອົງບັດນີ້ຂໍໂຜດຍົກໂທດບາບແຫ່ງຄວາມຊົ່ວຮ້າຍຂອງຜູ້ຮັບໃຊ້ຂອງພຣະອົງ,
ເພາະຂ້າພຣະອົງໄດ້ເຮັດການອັນໂງ່ຈ້າຫລາຍ."
[9]ພຣະຢາເວກ່າວກັບຄາດຜູ້ທຳນວາຍຂອງດາວິດວ່າ,[10]"ຈົ່ງໄປບອກດາວິດວ່າ, 'ພຣະຢາເວກ່າວດັ່ງນີ້ວ່າ: ເຮົາສະເຫນີເຈົ້າສາມປະການ.
ຈົ່ງເລືອກເອົາປະການຫນຶ່ງ.'"
[11]ດັ່ງນັ້ນຄາດຈຶ່ງເຂົ້າເຝົ້າດາວິດ ແລະ ກາບທູນພະອົງວ່າ, "ພຣະຢາເວກ່າວດັ່ງນີ້ວ່າ ຈົ່ງເລືອກເອົາຕາມທີ່ທ່ານພໍໃຈ:[12]ຄື
ຄວາມອຶດຢາກລະຫວ່າງສາມປີ, ຫລືສັດຕຣູຂອງເຈົ້າໄລ່ຕິດຕາມເຈົ້າລະຫວ່າງສາມເດືອນ ຂະນະທີ່ດາບຂອງສັດຕຣູ ຈະຕາມເຈົ້າທັນ, ຫລື
ຖືກດາບຂອງພຣະຢາເວສາມມື້, ຄືພະຍາດຣະບາດເກີດຂຶ້ນເທິງແຜ່ນດິນ ແລະ
ທູດສະຫວັນຂອງພຣະຢາເວມາທຳລາຍໃນດິນແດນຂອງອິສະຣາເອນທັງຫມົດ. '
ບັດນີ້ຂໍໄດ້ພິຈາຣະນາເບິ່ງວ່າຈະໃຫ້ຂ້າພຣະອົງກາບທູນພຣະອົງຜູ້ໄດ້ໃຊ້ຂ້າພຣະອົງມາວ່າຢ່າງໃດ."
[13]ແລ້ວດາວິດກ່າວກັບຄາດວ່າ, "ເຮົາມີຄວາມກະວົນກະວາຍໃຈຫລາຍ. ຂໍໃຫ້ເຮົາຕົກຢູ່ໃນພຣະຫັດຂອງພຣະຢາເວ
ເພາະວ່າຄວາມເມດຕາຂອງພຣະອົງກໍຍິ່ງໃຫຍ່ຫລາຍ ຂໍຢ່າໃຫ້ເຮົາຕົກເຂົ້າໄປໃນມືຂອງມະນຸດເລີຍ."[14]ດັ່ງນັ້ນ
ພຣະຢາເວໄດ້ໃຫ້ພະຍາດຣະບາດເກີດຂຶ້ນໃນອິສະຣາເອນ, ແລະ ຄົນອິສະຣາເອນໄດ້ລົ້ມຕາຍເຈັດຫມື່ນຄົນ.
[15]ພຣະເຈົ້າໄດ້ໃຊ້ທູດສະຫວັນອົງຫນຶ່ງໄປທຳລາຍນະຄອນເຢຣູຊາເລັມ. ເມື່ອທູດສະຫວັນກຳລັງຈະທຳລາຍ, ພຣະຢາເວໄດ້ທອດພຣະເນດ
ແລະ ຊົງກັບພຣະທັຍຈາກເຫດຮ້າຍນັ້ນ. ພຣະອົງໄດ້ບອກກັບທູດສະຫວັນຜູ້ກຳລັງຈະທຳລາຍນັ້ນວ່າ, "ພໍແລ້ວ ຫ້າມມືຂອງເຈົ້າດຽວນີ້."
ໃນເວລານັ້ນທູດສະຫວັນຂອງພຣະຢາເວກໍກຳລັງຢືນຢູ່ທີ່ລານຟາດເຂົ້າຂອງອາໂຣນາ ຄົນເຢບຸດ.
[16]ດາວິດແຫງນຫນ້າຂຶ້ນ ແລະ ກໍໄດ້ເຫັນທູດສະຫວັນຂອງພຣະຢາເວຢືນຢູ່ລະຫວ່າງແຜ່ນດິນໂລກ ແລະ ຟ້າສະຫວັນ,
ໃນມືຖືດາບຢຽດອອກເທິງນະຄອນເຢຣູຊາເລັມ. ແລ້ວດາວິດ ແລະ ພວກເຖົ້າແກ່ຂອງອິສະຣາເອນ, ຜູ້ໄດ້ສວມຜ້າກະສອບໄດ້ກົ້ມຫນ້າລົງພື້ນ.
[17]ດາວິດທູນພຣະເຈົ້າວ່າ, "ຂ້າພະອົງບໍ່ແມ່ນບໍທີ່ອອກຄຳສັ່ງໃຫ້ນັບກອງທັບ? ຂ້າພະອົງເປັນຜູ້ເຮັດບາບ ແລະໄດ້ເຮັດການຮ້າຍທີ່ໃຫຍ່ຫລວງນີ້.
ແຕ່ບັນດາຝູງແກະເຫລົ່ານີ້ ພວກເຂົາໄດ້ເຮັດສິ່ງໃດ? ຂ້າແດ່ພຣະຢາເວ! ພຣະເຈົ້າຂອງຂ້າພຣະອົງ
ຂໍໃຫ້ພຣະຫັດຂອງພຣະອົງຢູ່ເຫນືອຂ້າພຣະອົງ ແລະ ຄອບຄົວຂອງຂ້າພຣະອົງ,
ແຕ່ຂໍຢ່າໃຫ້ພະຍາດຮ້າຍນັ້ນຢູ່ເຫນືອປະຊາຊົນຂອງພຣະອົງ."
[18]ດັ່ງນັ້ນທູດສະຫວັນຂອງພຣະຢາເວໄດ້ສັ່ງໃຫ້ຄາດທູນດາວິດວ່າ
ໃຫ້ດາວິດຂຶ້ນໄປສ້າງແທ່ນບູຊາຖວາຍແດ່ພຣະຢາເວທີ່ລານຟາດເຂົ້າຂອງອາໂຣນາຄົນເຢບຸດ.[19]ສະນັ້ນ ດາວິດຂຶ້ນໄປຕາມຄຳຂອງຄາດ
ຊຶ່ງເພິ່ນໄດ້ບອກໃນພຣະນາມຂອງພຣະຢາເວ.[20]ຝ່າຍອາໂຣນາກຳລັງຟາດເຂົ້າຢູ່, ເພິ່ນຫລຽວມາເຫັນທູດສະຫວັນ.
ເພິ່ນພ້ອມກັບລູກຊາຍສີ່ຄົນທີ່ຢູ່ນຳກັນກໍໄປລີ້.
[21]ເມື່ອດາວິດສະເດັດມາເຖິງອາໂຣນາ, ອາໂຣນາຫລຽວເຫັນດາວິດ. ລາວໄດ້ອອກມາຈາກລານຟາດເຂົ້າ ແລະ ໄດ້ຄຳນັບດາວິດ
ດ້ວຍການຫມູບຫນ້າລົງດິນຕໍ່ຫນ້າດາວິດ.[22]ແລ້ວດາວິດກ່າວກັບອາໂຣນາວ່າ "ຈົ່ງຂາຍລານຟາດເຂົ້ານີ້ໃຫ້ແກ່ເຮົາເຖີດ,
ເພື່ອເຮົາຈະສ້າງແທ່ນບູຊາສຳລັບພຣະຢາເວ. ໃນບ່ອນນີ້ ຈົ່ງຄິດຕາມລາຄາເຕັມ ເພື່ອວ່າພະຍາດຣະບາດນັ້ນຈະໄດ້ຫາຍໄປຈາກປະຊາຊົນ."
[23]ອາໂຣນາກາບທູນດາວິດວ່າ, "ເຊີນເອົາບ່ອນນີ້ສຳລັບພະອົງເຖີດ, ຂໍໃຫ້ເຈົ້ານາຍຂອງຂ້າພະອົງເຮັດໃນສິ່ງທີ່ພະອົງໄດ້ເຫັນດີສາ.
ຂ້າພະອົງຂໍຖວາຍງົວເພື່ອເປັນເຄື່ອງເຜົາບູຊາ, ຖວາຍໄມ້ຟາດເຂົ້າໃຫ້ເປັນຟືນ ແລ້ວເຂົ້າສາລີເປັນເຄື່ອງບູຊາພືດຜົນເປັນເມັດ;
ສິ່ງເຫລົ່ານີ້ຂ້ານ້ອຍຂໍຖວາຍທັງຫມົດ."[24]ກະສັດດາວິດກ່າວກັບອາໂຣນາວ່າ, "ບໍ່ໄດ້ດອກ, ແຕ່ເຮົາຈະຊື້ເອົາຕາມລາຄາເຕັມ.
ເຮົາຈະບໍ່ເອົາສິ່ງຂອງເຈົ້າ ແລະ ຖວາຍພຣະຜູ້ເປັນເຈົ້າເປັນເຄື່ອງເຜົາບູຊາໂດຍທີ່ເຮົາບໍ່ໄດ້ເສຍຄ່າ."
[25]ດາວິດຈຶ່ງໄດ້ຈ່າຍໃຫ້ອາໂຣນາເປັນທອງຄຳຫນັກຫົກຮ້ອຍເຊເຂສຳລັບບ່ອນນັ້ນ.
[26]ດາວິດໄດ້ກໍສ້າງແທ່ນບູຊາຖວາຍສຳລັບພຣະຢາເວຢູ່ບ່ອນນັ້ນ ແລະ ຊົງຖວາຍເຄື່ອງເຜົາບູຊາ ກັບເຄື່ອງບູຊາໂມທະນາພຣະຄຸນ.
ພະອົງໄດ້ຊົງກາບທູນອອກພຣະນາມພຣະຢາເວຜູ້ໄດ້ຊົງຕອບພະອົງດ້ວຍໄຟຈາກສະຫວັນຕົກເທິງແທ່ນເຜົາບູຊາ.
[27]ແລ້ວພຣະຢາເວກໍໄດ້ສັ່ງແກ່ທູດສະຫວັນ, ແລະ ທູດນັ້ນກໍໄດ້ເອົາດາບເຂົ້າໃສ່ໄວ້ໃນຝັກຄືນ.
[28]ເທື່ອນັ້ນ ເມື່ອດາວິດໄດ້ເຫັນວ່າພຣະຢາເວໄດ້ຕອບຕົນໃນລານຟາດເຂົ້າຂອງອາໂຣນາຄົນເຢບຸດ,
ພະອົງກໍໄດ້ຖວາຍບູຊາໃນບ່ອນນັ້ນໃນເວລາດຽວກັນ.[29]ໃນຂະນະນັ້ນ, ຫໍເຕັນຂອງພຣະຢາເວ ຊຶ່ງໂມເຊໄດ້ສ້າງຂຶ້ນໃນຖິ່ນແຫ້ງແລ້ງກັນດານ,
ແລະແທ່ນເຜົາບູຊາກໍຢູ່ໃນບ່ອນສູງທີ່ກິເບໂອນໃນສມັຍນັ້ນ.[30]ແຕ່ດາວິດບໍ່ກ້າທີ່ຈະໄປທູນຖາມພຣະເຈົ້າຢູ່ຕໍ່ຫນ້າແທ່ນບູຊານັ້ນ,
ເພາະພະອົງຢ້ານດາບຂອງທູດສະຫວັນຂອງພຣະຢາເວ.


generated on Tue Jun 17 19:01:42 2025

22 [1]ແລ້ວດາວິດໄດ້ກ່າວວ່າ, “ນີ້ແຫລະ ພຣະວິຫານຂອງພຣະຢາເວ ພຣະເຈົ້າ ກໍຢູ່ບ່ອນນີ້, ແລະ
ແທ່ນສຳລັບເຜົາເຄື່ອງບູຊາຂອງຊາວອິສະຣາເອນກໍແມ່ນແທ່ນນີ້.”[2]ດາວິດໄດ້ອອກຄຳສັ່ງໃຫ້ຮວບຮວມຄົນຕ່າງດ້າວທີ່ຢູ່ໃນແຜ່ນດິນອິສະຣາເອນ.
ພະອົງໄດ້ຈັດໃຫ້ພວກເຂົາເປັນຄົນສະກັດຫີນ, ໃຫ້ຕຽມສະກັດຫີນເພື່ອສ້າງພຣະວິຫານຂອງພຣະເຈົ້າ.

[3]ດາວິດໄດ້ຈັດຕຽມເຫລັກເປັນຈຳນວນຫລາຍ ເພື່ອເປັນເຫລັກຕະປູສຳລັບບານປະຕູ, ແລະ
ເຫລັກຈອດພ້ອມທັງທອງເຫລືອງເປັນຈຳນວນຫລວງຫລາຍຈົນບໍ່ສາມາດທີ່ຈະຊັ່ງນ້ຳຫນັກໄດ້,[4]ແລະ ໄມ້ສົນສີດາຈົນນັບຈຳນວນບໍ່ຖ້ວນ
(ເພາະວ່າຊາວຊີໂດນ ແລະ ຊາວຕີເຣ ໄດ້ນຳໄມ້ສົນສີດາເປັນຈຳນວນຫລວງຫລາຍມາຖວາຍແກ່ດາວິດ.)[5]ເພາະດາວິດໄດ້ກ່າວວ່າ,
“ໂຊໂລໂມນລູກຊາຍຂອງເຮົາກໍຍັງນ້ອຍຢູ່ ແລະ ບໍ່ເຄີຍຜ່ານວຽກງານ, ແລະ
ພຣະວິຫານຊຶ່ງຈະສ້າງຖວາຍພຣະຢາເວນັ້ນຕ້ອງສວຍງາມກວ້າງໃຫຍ່ ມີຊື່ສຽງ ແລະ ມີສະຫງ່າຣາສີໃນທ່າມກາງບັນດາປະເທດທັງຫລາຍ.
ເພາະສະນັ້ນ ເຮົາຈຶ່ງຈະຈັດຕຽມໄວ້.” ດາວິດຈຶ່ງໄດ້ຈັດຕຽມວັດຖຸເປັນຈຳນວນຫລວງຫລາຍກ່ອນພະອົງຈະສິ້ນພະຊົນ.
[6]ແລ້ວພະອົງໄດ້ເອີ້ນໂຊໂລໂມນລູກຊາຍຂອງຕົນມາ ແລະ ສັ່ງລາວໃຫ້ສ້າງພຣະວິຫານສຳລັບພຣະຢາເວ ພຣະເຈົ້າຂອງອິສະຣາເອນ.
[7]ດາວິດໄດ້ບອກແກ່ໂຊໂລໂມນວ່າ, “ລູກຊາຍເອີຍ, ເຮົາມີໃຈປະສົງທີ່ຈະສ້າງພຣະວິຫານສຳລັບພຣະນາມແຫ່ງພຣະຢາເວພຣະເຈົ້າຂອງເຮົາ.
[8]ແຕ່ພຣະຢາເວໄດ້ສະເດັດມາຫາເຮົາ ແລະ ກ່າວວ່າ, ‘ເຈົ້າໄດ້ເຮັດໃຫ້ຄົນເລືອດຕົກຫລາຍ ແລະ ໄດ້ເຮັດສົງຄາມຢ່າງຫລວງຫລາຍ.
ເຈົ້າຢ່າໄດ້ສ້າງພຣະວິຫານເພື່ອນາມຂອງເຮົາເລີຍ,
ເພາະເຈົ້າໄດ້ເຮັດໃຫ້ເລືອດຕົກລົງດິນຢ່າງຫລາຍເຫລືອລົ້ນຕໍ່ຫນ້າຂອງເຮົາເທິງແຜ່ນດິນໂລກ.
[9]ເບິ່ງແມ໋ ລູກຊາຍຄົນຫນຶ່ງຂອງເຈົ້າຈະບັງເກີດມາ ລາວຈະມີຄວາມສະຫງົບສຸກ.
ເຮົາຈະປຣະທານໃຫ້ລາວຢູ່ເຢັນເປັນສຸກພົ້ນຈາກສັດຕຣູທັງຫມົດທີ່ຢູ່ອ້ອມຂ້າງລາວ. ເພາະວ່າ ລາວຈະມີຊື່ວ່າໂຊໂລໂມນ, ແລະ
ໃນສມັຍຂອງລາວ ເຮົາຈະໂຜດ ໃຫ້ອິສະຣາເອນມີສັນຕິພາບ ແລະ ຄວາມສະຫງົບສຸກ.[10]ລາວຈະສ້າງພຣະວິຫານເພື່ອນາມຂອງເຮົາ, ແລະ
ລາວຈະເປັນບຸດຂອງເຮົາ, ແລະ ເຮົາຈະເປັນບິດາຂອງລາວ.
ເຮົາຈະສະຖາປະນາຣາຊະບັນລັງຂອງລາວປົກຄອງອິສະຣາເອນຕະຫລອດໄປເປັນນິດ.’
[11]ນີ້ແຫລະ ລູກຊາຍເອີຍ, ຂໍພຣະຢາເວໄດ້ສະຖິດຢູ່ກັບເຈົ້າ ແລະ ຂໍໃຫ້ເຈົ້າມີຄວາມຈະເຣີນຮຸ່ງເຮືອງຂຶ້ນ.
ຂໍໃຫ້ເຈົ້າກໍ່ສ້າງພຣະວິຫານຂອງພຣະຢາເວພຣະເຈົ້າຂອງເຈົ້າສຳເລັດຕາມທີ່ພຣະອົງໄດ້ກ່າວເຖິງເຈົ້າເຖີດ.
[12]ຂໍພຽງແຕ່ພຣະຢາເວປຣະທານສະຕິປັນຍາ ແລະ ຄວາມເຂົ້າໃຈໃຫ້ແກ່ເຈົ້າ, ແລະຕັ້ງເຈົ້າໃຫ້ປົກຄອງອິສະຣາເອນ ແລະ
ໂຜດໃຫ້ເຈົ້າຖືຮັກສາພຣະບັນຍັດຂອງພຣະຢາເວ ພຣະເຈົ້າຂອງເຈົ້າ.[13]ເມື່ອນັ້ນ ເຈົ້າຈະຈະເຣີນຮຸ່ງເຮືອງຂຶ້ນ,
ຖ້າເຈົ້າລະມັດຣະວັງທີ່ຈະປະຕິບັດຕາມພຣະບັນຍັດ ແລະ ຂໍ້ຄຳສັ່ງທັງຫລາຍ ຊຶ່ງພຣະຢາເວໄດ້ສັ່ງໄວ້ກັບໂມເຊສຳລັບຊົນຊາດອິສະຣາເອນ.
ຈົ່ງເຂັ້ມແຂງ ແລະ ກ້າຫານເຖີດ ຢ່າຢ້ານ ຫລື ຢ່າຕົກໃຈເລີຍ.
[14]ເບິ່ງແມ໋, ໃນຄວາມຍາກລຳບາກຂອງຂ້າພຣະອົງ, ຂ້າພຣະອົງໄດ້ຈັດຕຽມໄວ້ສຳລັບພຣະວິຫານຂອງພຣະຢາເວ
ເປັນທອງຄຳຫນັກຫນຶ່ງແສນຕະລັນຕົນ, ເງິນຫນັກຫນຶ່ງລ້ານຕະລັນ, ແລະ ທອງເຫລືອງ ແລະ ເຫລັກທີ່ບໍ່ສາມາດຈະຊັ່ງໄດ້
ເພາະມີຈຳນວນຢ່າງຫລວງຫລາຍ. ເຮົາໄດ້ຈັດຕຽມໄມ້ ແລະ ຫີນທັງຫລາຍ. ເຈົ້າຈະເພີ່ມຕື່ມເຂົ້າອີກກໍໄດ້.
[15]ຫລາຍໄປກວ່ານັ້ນ ຍັງມີຄົນເຮັດວຽກຢ່າງຫລວງຫລາຍທີ່ຢູ່ນຳເຈົ້າຄື ຊ່າງສະກັດຫີນ, ຊ່າງກໍ່, ຊ່າງໄມ້, ແລະ ຊ່າງສີມືທຸກປະເພດ.[16]ເງິນ,
ທອງເຫລືອງ, ແລະ ເຫລັກ. ດັ່ງນັ້ນ ຈົ່ງລຸກຂຶ້ນ ແລະ ເຮັດການນັ້ນເຖີດ, ແລະ ຂໍພຣະຢາເວສະຖິດຢູ່ກັບເຈົ້າ”.
[17]ດາວິດໄດ້ອອກຄຳສັ່ງໃຫ້ຫົວຫນ້າເຜົ່າທັງປວງຂອງອິສະຣາເອນໃຫ້ຊ່ວຍໂຊໂລໂມນລູກຊາຍຂອງພະອົງດ້ວຍ ກ່າວວ່າ,
[18]ພຣະຢາເວພຣະເຈົ້າຂອງພວກທ່ານຊົງຢູ່ກັບພວກທ່ານ ແລະ ພຣະອົງໄດ້ປຣະທານໃຫ້ພວກເຈົ້າມີຄວາມສະຫງົບສຸກໃນທຸກດ້ານ.
ເພາະພຣະອົງໄດ້ມອບຊາວແຜ່ນດິນນີ້ໄວ້ໃນມືຂອງເຮົາ. ແຜ່ນດິນນັ້ນກໍສະຫງົບຕໍ່ພຣະພັກພຣະຢາເວ ແລະ ຕໍ່ຫນ້າປະຊາຊົນຂອງພຣະອົງ.
[19]ບັດນີ້ຈົ່ງຕັ້ງຈິດຕັ້ງໃຈຂອງເຈົ້າທີ່ຈະຊອກຫາພຣະຢາເວພຣະເຈົ້າຂອງເຈົ້າດ້ວຍຈິດໃຈ ແລະ ຈິດວິນຍານ.
ຈົ່ງລຸກຂຶ້ນສ້າງສະຖານທີ່ບໍຣິສຸດຂອງພຣະຢາເວພຣະເຈົ້າ. ຈາກນັ້ນພວກເຈົ້າຈະເອົາຫີບພັນທະສັນຍາຂອງພຣະຢາເວ ແລະ
ເຄື່ອງໃຊ້ອັນບໍຣິສຸດຂອງພຣະອົງມາໄວ້ໃນພຣະວິຫານທີ່ຈະສ້າງຂຶ້ນສຳລັບພຣະນາມຂອງພຣະຢາເວ.”

23
[1]ເມື່ອດາວິດເຖົ້າຫລາຍແລ້ວ ແລະ ຊົງໃກ້ຈະເຖິງວາຣະສຸດທ້າຍແຫ່ງຊີວິດ,
ພະອົງໄດ້ຕັ້ງໂຊໂລໂມນລູກຊາຍຂອງພະອົງໃຫ້ເປັນກະສັດປົກຄອງອິສະຣາເອນ.[2]ພະອົງໄດ້ເອີ້ນເຈົ້ານາຍທັງຫມົດຂອງອິສະຣາເອນ,
ບັນດາປະໂລຫິດ ແລະ ຄົນເລວີມາປະຊຸມກັນ.[3]ພວກເຂົາໄດ້ນັບຈຳນວນຄົນເລວີນັບຕັ້ງແຕ່ອາຍຸສາມສິບປີຂຶ້ນໄປ.
ຊຶ່ງມີຈຳນວນສາມຫມື່ນແປດພັນຄົນ.

[4]ຈາກພວກນີ້ສອງຫມື່ນສີ່ພັນຄົນຈະຕ້ອງເບິ່ງແຍງວຽກງານໃນພຣະວິຫານຂອງພຣະຢາເວ, ແລະ ຫົກພັນຄົນເປັນເຈົ້າຫນ້າທີ່ ແລະ ຜູ້ຕັດສິນ.
[5]ອີກສີ່ພັນຄົນເປັນຜູ້ເຝົ້າຍາມບັນດາປະຕູ ແລະ ອີກສີ່ພັນຄົນຈະຖວາຍສັນຣະເສີນແດ່ພຣະຢາເວ
ດ້ວຍເຄື່ອງດົນຕຣີຕ່າງໆທີ່ເຮົາໄດ້ສ້າງໄວ້ສຳລັບການສັນຣະເສີນ,”[6]ດາວິດໄດ້ຈັດແບ່ງພວກເຂົາເປັນພະແນກຕາມລູກຊາຍຂອງເລວີຄື ເກໂຊນ,
ໂກຮາດ ແລະ ເມຣາຣີ.
[7]ໃນຈຳພວກເກໂຊນຄື ລາດານ ແລະ ຊິເມອີ.[8]ລູກຊາຍຂອງລາດານຊື່ວ່າ ເຢຣີເອນເປັນຫົວຫນ້າ, ເຊທາມ ແລະ ໂຢເອນ. ມີທັງຫມົດສາມຄົນ.
[9]ລູກຊາຍຂອງຊິເມອີຊື່ວ່າເຊໂລມິດ, ຮາຊີເອນ, ແລະ ຮາຣານ. ທັງຫມົດສາມຄົນ ຄົນເຫລົ່ານີ້ເປັນຫົວຫນ້າຂອງບັນພະບຸຣຸດຂອງລາດານ.
[10]ລູກຊາຍຂອງຊິເມອີມີສີ່ຄົນຄື: ຢາຮາດ, ຊີນາ, ເຢອຸດ, ແລະເບຣິອາ.[11]ຢາຮາດເປັນຜູ້ກົກ, ຊີຊາເປັນຜູ້ທີສອງ, ແຕ່ເຢອຸດ ແລະ
ເບຣິອາບໍ່ມີລູກຊາຍຫລາຍຄົນ, ເພາະສະນັ້ນ
ໃນການນັບຈຳນວນຈຶ່ງລວມເຂົ້າເປັນຄອບຄົວບັນພະບຸຣຸດດຽວກັນມີຫນ້າທີ່ທັງຫລາຍຢ່າງດຽວກັນ.
[12]ລູກຊາຍຂອງໂກຮາດມີສີ່ຄົນຄື: ອຳຣາມ, ອິດຊະຮາ, ເຮັບໂຣນ, ແລະ ອຸດຊີເອນ.[13]ລູກຊາຍຂອງອຳຣາມຄື ອາໂຣນ ແລະ ໂມເຊ.
ພວກເຂົາຕັ້ງອາໂຣນໄວ້ຕ່າງຫາກໃຫ້ເປັນຜູ້ເຮັດພິທີຊຳຣະສິ່ງຂອງທີ່ບໍຣິສຸດທີ່ສຸດ, ທັງລາວ ແລະ ລູກຊາຍຂອງລາວສືບໄປເປັນນິດ
ເພື່ອເຜົາເຄື່ອງຫອມຖວາຍຕໍ່ພຣະພັກພຣະຢາເວ, ແລະ ບົວລະບັດພຣະອົງ ແລະ
ອວຍພຣະພອນໃນພຣະນາມຂອງພຣະອົງຕະຫລອດໄປເປັນນິດ.[14]ຝ່າຍໂມເຊຄົນຂອງພຣະເຈົ້ານັ້ນ,
ລູກຊາຍຂອງເພິ່ນມີຊື່ໃນທ່າມກາງຕະກູນເລວີ.
[15]ລູກຊາຍຂອງໂມເຊຊື່ວ່າ ເກໂຊມ ແລະ ເອລີເອເຊ.[16]ລູກຫລານຂອງເກໂຊມຊື່ວ່າ ເຊບູເອນຜູ້ເປັນຜູ້ກົກ.[17]ລູກຫລານຂອງເອລີເອເຊຄື
ເຣຮາບີຢາຜູ້ເປັນຫົວຫນ້າ, ເອລີເອເຊບໍ່ມີລູກຊາຍອີກ ແຕ່ລູກຊາຍຂອງເຣຮາບີຢາມີ ຫລາຍຄົນ.[18]ລູກຊາຍຂອງອິດຊະຮາຄື
ເຊໂລມິດຜູ້ເປັນຫົວຫນ້າ.
[19]ລູກຊາຍຂອງເຮັບໂຣນຄື ເຢຣີຢາເປັນຜູ້ກົກ, ອາມາຣີຢາຜູ້ທີສອງ, ຢາຮາຊີເອນຜູ້ທີສາມ ແລະ ເຢກາເມອາມຜູ້ທີສີ່.[20]ລູກຊາຍຂອງອຸດຊີເອນຄື
ມີກາເປັນຜູ້ກົກ, ແລະ ອິດຊີຢາຜູ້ທີສອງ.
[21]ລູກຊາຍຂອງເມຣາຣີຄື ມາລີ ແລະ ມູຊີ. ລູກຊາຍຂອງມາລີຄື ເອເລອາຊາ ແລະ ກີເຊ.[22]ເອເລອາຊາສິ້ນຊີວິດໂດຍທີ່ບໍ່ມີລູກຊາຍ.
ມີແຕ່ລູກສາວ. ລູກຊາຍຂອງກີເຊຜູ້ເປັນພີ່ນ້ອງຂອງລາວໄດ້ແຕ່ງງານກັບພວກຜູ້ຍິງເຫລົ່ານັ້ນ.[23]ລູກຊາຍຂອງມູຊີຄື ມາລີ, ເອເດ, ແລະ
ເຢເຣໂມດ, ລວມສາມຄົນ.
[24]ຄົນເຫລົ່ານີ້ເປັນຄົນເລວີຕາມເຊື້ອສາຍບັນພະບຸຣຸດຂອງພວກເຂົາ. ພວກເຂົາເປັນຫົວຫນ້າຕາມບັນພະບຸຣຸດຂອງພວກເຂົາ
ຕາມທີ່ພວກເຂົາໄດ້ຂຶ້ນທະບຽນໄວ້, ຕາມຈຳນວນລາຍຊື່ຂອງບຸກຄົນ
ຕັ້ງແຕ່ອາຍຸຊາວປີຂຶ້ນໄປຜູ້ທີ່ຈະເຮັດວຽກບົວຣະບັດໃນພຣະວິຫານຂອງພຣະຢາເວ.[25]ເພາະດາວິດໄດ້ກ່າວວ່າ, “ພຣະຢາເວ
ພຣະເຈົ້າຂອງອິສະຣາເອນໄດ້ໂຜດໃຫ້ປະຊາຊົນຂອງພຣະອົງຢູ່ຢ່າງສະຫງົບສຸກ. ເພື່ອພວກເຂົາຈະໄດ້ອາໄສຢູ່ໃນເຢຣູຊາເລັມສືບໄປເປັນນິດ.
[26]ຄົນເລວີຈຶ່ງບໍ່ຕ້ອງຫາມຫໍເຕັນ ຫລື ເຄື່ອງໃຊ້ໃດໆເພື່ອວຽກງານບົວຣະບັດອີກເລີຍ.”
[27]ເພາະວ່າພວກເຂົາໄດ້ນັບຈຳພວກລູກຫລານເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປຕາມຄຳສັ່ງສຸດທ້າຍຂອງດາວິດ.
[28]ຫນ້າທີ່ຂອງພວກເຂົາຈະຕ້ອງຄອຍຊ່ວຍລູກຫລານຂອງອາໂຣນໃນການເຂົ້າເຝົ້າໃນພຣະວິຫານ. ເພື່ອດູແລເດີ່ນດ້ານຫນ້າ, ຫ້ອງທັງຫລາຍ
ແລະ ວຽກງານຊຳຣະສິ່ງຂອງທີ່ເປັນຂອງພຣະຢາເວ, ແລະ ທຸກວຽກ ຊຶ່ງເປັນການບົວຣະບັດໃນພຣະວິຫານຂອງພຣະເຈົ້າ.
[29]ພວກເຂົາຊ່ວຍເບິ່ງແຍງໃນການເອົາເຂົ້າຈີ່ໄປວາງໄວ້ຕໍ່ພຣະພັກ, ແປ້ງເນື້ອລະອຽດສຳລັບຖວາຍບູຊາ, ເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ, ເຄື່ອງອົບຖວາຍ,
ເຂົ້າຈີ່ປີ້ງທີ່ທາດ້ວຍນ້ຳມັນ, ເຄື່ອງຜອງ ແລະ ເຄື່ອງວັດແທກທຸກຂະຫນາດ.
[30]ທຸກຕອນເຊົ້າພວກເຂົາໄດ້ຢືນໂມທະນາຂອບພຣະຄຸນ ແລະ ສັນຣະເສີນພຣະຢາເວ. ເວລາແລງພວກເຂົາກໍເຮັດເຊັ່ນດຽວກັນ.
[31]ພ້ອມທັງການຖວາຍບັນດາເຄື່ອງເຜົາບູຊາແດ່ພຣະຢາເວ, ໃນວັນສະບາໂຕ ແລະ ໃນເດືອນອອກໃຫມ່ມື້ຂຶ້ນຫນຶ່ງຄ່ຳໃນວັນເທສະການ.
ຕາມຈຳນວນ, ທີ່ກຳນົດໃຫ້ຖວາຍບູຊາໂດຍຄຳສັ່ງຕໍ່ພຣະພັກພຣະຢາເວທຸກມື້ເລື້ອຍໄປ.
[32]ພວກເຂົາໄດ້ຮັບໃຊ້ເບິ່ງແຍງຫໍເຕັນ, ແຫ່ງຊຸມນຸມ, ແລະ ຮັບໃຊ້ໃນບ່ອນບໍຣິສຸດ
ທັງການຮັບໃຊ້ຮ່ວມກັບລູກຫລານຂອງອາໂຣນພີ່ນ້ອງຂອງພວກເຂົາ ເພື່ອງານບົວຣະບັດໃນພຣະວິຫານຂອງພຣະຢາເວ.

# 24

1ຫນ່ວຍງານຂອງລູກຫລານອາໂຣນມີດັ່ງນີ້ ລູກຊາຍຂອງອາໂຣນມີຄື ນາດາບ, ອາບີຮູ, ເອເລອາຊາ ແລະ ອີທາມາ.2ນາດາບ ແລະ
ອາບີຮູໄດ້ເສຍຊີວິດກ່ອນພໍ່ຂອງຕົນ ແລະ ຍັງບໍ່ທັນມີລູກ, ດັ່ງນັ້ນ ເອເລອາຊາ ແລະ ອີທາມາຈຶ່ງເຮັດຫນ້າທີ່ຕຳແຫນ່ງປະໂລຫິດ.
3ດາວິດໄດ້ແຕ່ງຕັ້ງພວກເຂົາເປັນແຕ່ລະຫນ່ວຍງານຕາມຫນ້າທີ່ໃນການບົວຣະບັດຂອງພວກເຂົາຄືກັບພວກປະໂລຫິດມີຊາໂດກລູກຫລານ,
ເອເລອາຊາ ແລະ ອາຮີເມເລັກລູກຫລານອີທາມາ.

4ເຫັນວ່າຫົວຫນ້າໃນພວກລູກຊາຍຂອງເອເລອາຊາຫລາຍກວ່າຫມູ່ໃນພວກລູກຫລານຂອງອີທາມາພວກເຂົາໄດ້ຈັດ, ດັ່ງນັ້ນ,
ພວກເຂົາໄດ້ແບ່ງລູກຫລານເປັນສິບຫົກຫນ່ວຍງານ. ພວກເຂົາໄດ້ກະທຳສິ່ງນີ້ໂດຍຫົວຫນ້າທັງຫລາຍຂອງຕະກູນ ແລະ
ໂດຍພວກລູກຫລານຂອງອີທາມາ. ການແບ່ງເຫລົ່ານີ້ມີຈຳນວນ ແປດຫນ່ວຍງານ, ອີງຕາມຄອບຄົວບັນພະບູລຸດຂອງພວກເຂົາ.
5ພວກເຂົາຈັດແບ່ງຫນ່ວຍງານດ້ວຍການຈົກສະຫລາກ ເພາະວ່າພວກເຈົ້າຫນ້າທີ່ຂອງສະຖານທີ່ບໍຣິສຸດ ແລະ
ເຈົ້າຫນ້າທີ່ແຫ່ງພຣະວິຫານຂອງພຣະເຈົ້າ, ມາຈາກລູກຫລານຂອງເອເລອາຊາກັບລູກຫລານຂອງອີທາມາ.
6ເຊມາຢາລູກຊາຍເນທາເນນເປັນເລຂາ, ຊຶ່ງເປັນຄົນເລວີ, ໂດຍໄດ້ບັນທຶກໄວ້ຕໍ່ພຣະພັກກະສັດຕໍ່ຫນ້າເຈົ້ານາຍ ແລະປະໂລຫິດຊາໂດກ, ແລະ
ອາຮີເມເລັກລູກຊາຍອາບີອາທາ ແລະ ຕໍ່ຫນ້າຫົວຫນ້າບັນພະບູລຸດຂອງປະໂລຫິດ ແລະ ຂອງຄົນເລວີ.
ພວກເຂົາຈົກສະຫລາກຄອບຄົວຫນຶ່ງຈາກເອເລອາຊາ ແລະ ຄອບຄົວຫນຶ່ງຈາກອີທາມາ.
7ສະຫລາກທຳອິດຕົກຖືກເຢໂຮຢາຣິບ, ທີສອງຕົກຖືກເຢດາຢາ,8ທີສາມຕົກຖືກຮາລິມ, ທີສີ່ຕົກຖືກເສໂອຣິມ,9ທີຫ້າຕົກຖືກມັນກີຢາ,
ທີຫົກຕົກຖືກມີຢາມິນ,10ທີເຈັດຕົກຖືກຮັກກົດ, ທີແປດຕົກຖືກອາບີຢາ,
11ທີເກົ້າຕົກຖືກເຢຊູອາ, ທີສິບຕົກຖືກເຊການີອາ,12ທີສິບເອັດຕົກຖືກອາລີອາຊີບ, ສິບສອງຕົກຖືກຢາກີມ,13ທີສິບສາມຕົກຖືກຮຸບປາ,
ທີສິບສີ່ຕົກຖືກເຢເຊເບອາບ,14ທີສິບຫ້າຕົກຖືກບິນກາ, ທີສິບຫົກຕົກຖືກອິມເມ,
15ທີສິບເຈັດຕົກຖືກເຮຊີ, ທີສິບແປດຕົກຖືກຮາບປິດເຊັດ,16ທີສິບເກົ້າຕົກຖືກເປທາຮີຢາ, ທີຊາວຕົກຖືກເຢເຮັດຊະເກັນ,17ທີຊາວເອັດຕົກຖືກຢາກີນ,
ທີຊາວສອງຕົກຖືກກາມູນ,18ທີຊາວສາມຕົກຖືກເດລາຢາ, ແລະ ທີຊາວສີ່ຕົກຖືກມາອາຊີຢາ.
19ຄົນເຫລົ່ານີ້ມີການກຳນົດຫນ້າທີ່ຂອງພວກເຂົາໃນການບົວຣະບັດ, ເພື່ອທີ່ຈະເຂົ້າໄປໃນພຣະວິຫານຂອງພຣະຢາເວ, ຕາມຫນ້າທີ່ ແລະ
ລະບຽບການຊຶ່ງອາໂຣນພໍ່ຂອງພວກເຂົາໄດ້ຕັ້ງໄວ້ສຳລັບພວກເຂົາ, ດັ່ງທີ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ໄດ້ສັ່ງພວກເຂົາໄວ້.
20ສ່ວນພວກລູກຫລານເລວີທີ່ຍັງເຫລືອຢູ່ມີຄື: ຈາກລູກຊາຍຂອງອຳຣາມ; ຊູບາເອນ ຈາກລູກຊາຍຂອງຊູບາເອນ, ແມ່ນເຢເດຢາ.
21ຈາກລູກຊາຍຂອງເຣຮາບີຢາ: ອິດຊີຢາເປັນຫົວຫນ້າ.22ຈາກຄົນອິດຊະຮາ, ເຊໂລມິດ, ຈາກລູກຊາຍຂອງເຊໂລມິດແມ່ນຢາຮາດ.
23ຈາກພວກລູກຊາຍຂອງເຮັບໂຣນຄື: ເຢຣີຢາຜູ້ເປັນຫົວຫນ້າ, ອາມາຣີຢາຜູ້ທີສອງ, ຢາຮາຊີເອນຜູ້ທີສາມ, ແລະ ເຢກາເມອາມຜູ້ທີສີ່.
24ພວກລູກຊາຍຂອງອຸດຊີເອນຄື: ມີກາ. ລູກຊາຍຂອງມີກາຄື ຊາມີ.25ນ້ອງຊາຍຂອງມີກາຄື ອິດຊີຢາ, ລູກຊາຍຂອງອິດຊີຢາຄື ເຊຄາຣີຢາ.
26ລູກຊາຍຂອງເມຣາຣີຊື່ວ່າ ມາລີ ແລະ ມູຊີ. ລູກຊາຍຂອງຢາອາຊີຢາຊື່ວ່າ ເບໂນ.27ເບໂນ, ໂຊຮາມ, ຊາກູ, ແລະ ອິບຣີ,
28ລູກຊາຍຂອງຈາກມາລີຄື ເອເລອາຊາຊຶ່ງເພິ່ນບໍ່ມີລູກຊາຍ.
29ພວກລູກຊາຍຂອງກີເຊ, ພວກລູກຊາຍຂອງກີເຊ ຄື ເຢຣາເມເອນ30ພວກລູກຊາຍຂອງໂມຊີຄື ມາລີ, ເອເດ ແລະເຢຣີໂມດ.
ຄົນເຫລົ່ານີ້ເປັນລູກຊາຍຂອງຄົນເລວີ, ຕາມຄອບຄົວບັນພະບຸຣຸດຂອງພວກເຂົາ.31ຈຳພວກຜູ້ຊາຍຄົນເຫລົ່ານີ້
ແຕ່ລະຄົນເປັນຫົວຫນ້າຄອບຄົວບັນພະບຸຣຸດ ແລະ ນ້ອງຊາຍຂອງພວກເຂົາແຕ່ລະຄົນກໍໄດ້ຈັບສະຫລາກຕໍ່ຫນ້າກະສັດດາວິດ, ແລະ ຊາໂດກ,
ແລະ ອາຮີເມເລັກ ພ້ອມທັງຜູ້ນຳທັງຫລາຍຂອງຄອບຄົວຂອງບັນພະບຸຣຸດຂອງປະໂລຫິດ ແລະ ຂອງຄົນເລວີ.
ພວກເຂົາໄດ້ຈັບສະຫລາກຄືກັນກັບລູກຫລານຂອງອາໂຣນທີ່ໄດ້ຈັບສະຫລາກຢ່າງດຽວກັນ.


generated on Tue Jun 17 19:01:42 2025

25 [1]ດາວິດ ແລະ ຜູ້ບັນຊາການກອງທັບໄດ້ຄັດເລືອກເອົາບາງຄົນຈາກພວກລູກຊາຍຂອງອາສັບ, ເຮມານ ແລະ
ຂອງເຢດູທູນໄວ້ສຳລັບການບົວຣະບັດ. ພວກນີ້ຈະທຳນວາຍດ້ວຍພິນຄູ່, ດ້ວຍພິນໃຫຍ່, ແລະ ດ້ວຍແສ່ງ.
ຈຳນວນຄົນທີ່ເຮັດວຽກຕາມໜ້າທີ່ຂອງພວກເຂົາມີຄື:[2]ລູກຊາຍຂອງອາສັບຄື ຊາກູເຣ, ໂຢເຊັບ, ເນທານີອາ, ແລະ ອາຊາເຣລາ,
ລູກຊາຍຂອງອາສັບ ໂດຍພາຍໃຕ້ການແນະນຳຂອງອາສັບ, ທີ່ເປັນຜູ້ທຳນວາຍຕາມພະຣາຊະດຳຣັດສັ່ງຂອງກະສັດ.[3]ຈາກເຢດູທູນຄື
ພວກລູກຊາຍຂອງເຢດູທູນຊື່ວ່າ: ເກດາລີຢາ, ເຊຣີ, ເຢຊາຢາ, ຊີເມອີ ຮາຊາບີຢາ, ແລະ ມັດຕີທີຢາ,
ຫົກຄົນພາຍໃຕ້ການນຳຂອງເຢດູທູນພໍ່ຂອງພວກເຂົາ, ຜູ້ຊຶ່ງພະຍາກອນດ້ວຍພິນຄູ່ໃນການໂມທະນາ ແລະ ການສັນຣະເສີນພຣະຢາເວ.

[4]ຈາກພວກລູກຊາຍຂອງເຮມານຊື່ວ່າ: ບຸກກີຢາ, ມັດຕານີຢາ, ອຸດຊີເອນ, ເຊບູເອນ, ແລະ ເຢຣີໂມດ, ຮານານີຢາ ຮານານີ, ເອລີອາທາ,
ກິດດັນຕີ, ໂຣມາມຕີເອເຊີ, ໂຢຊະເບກາຊາ, ມັນໂລທີ, ໂຮທີ ແລະ ມາຮາຊີໂອດ.[5]ຄົນເຫລົ່ານີ້ເປັນລູກຊາຍຂອງເຮມານຜູ້ທຳນວາຍຂອງກະສັດ.
ພຣະເຈົ້າໄດ້ປຣະທານລູກຊາຍສິບສີ່ຄົນ ແລະ ລູກສາວສາມຄົນໃຫ້ເຮມານເພື່ອໃຫ້ກຽດແດ່ພຣະເຈົ້າ.
[6]ພວກເຂົາທຸກຄົນຢູ່ພາຍໃຕ້ຄຳແນະນຳຜູ້ເປັນພໍ່ຂອງພວກເຂົາ. ພວກເຂົາເປັນນັກດົນຕຣີໃນພຣະວິຫານຂອງພຣະຢາເວດ້ວຍແສ່ງ, ພິນໃຫຍ່
ແລະ ພິນຄູ່ ເພື່ອການບົວຣະບັດໃນພຣະວິຫານຂອງພຣະເຈົ້າ. ອາສັບ, ເຢດູທູນ ແລະ ເຮມານ ຢູ່ພາຍໃຕ້ພະຣາຊະດຳຣັດສັ່ງຂອງກະສັດ.
[7]ພວກເຂົາ ແລ ພີ່ນ້ອງຂອງພວກເຂົາທີ່ໄດ້ຮັບການຝຶກໃນການຮ້ອງເພງຖວາຍພຣະຜູ້ເປັນເຈົ້າທີ່ມີຄວາມຊຳນານ
ທັງຫມົດມີສອງຮ້ອຍແປດສິບແປດຄົນ.[8]ພວກເຂົາຈັບສະຫລາກສຳລັບຫນ້າທີ່ຂອງພວກເຂົາທັງຜູ້ນ້ອຍ, ຜູ້ໃຫຍ່, ຄຣູສອນ ແລະ ລູກສິດກໍ່ຄືກັນ.
[9]ບັດນີ້ກ່ຽວກັບລູກຊາຍຂອງອາສັບ: ສະຫລາກທຳອິດຕົກຖືກຄອບຄົວຂອງໂຢເຊັບ; ທີ່ສອງໄດ້ແກ່ຄອບຄົວຂອງເກດາລີຢາ, ພ້ອມກັບພີ່ນ້ອງ
ແລະ ລູກຊາຍຂອງລາວສິບສອງຄົນ.[10]ສະຫລາກທີ່ສາມຕົກຖືກຊາກູເຣ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ.
[11]ສະຫລາກທີ່ສີ່ຕົກຖືກອິດຊະຣີ, ພ້ອມກັບລູກຊາຍຂອງລາວ, ແລະ ພີ່ນ້ອງຂອງລາວສິບສອງຄົນ.[12]ສະຫລາກທີ່ຫ້າຕົກຖືກເນທານີອາ,
ພ້ອມກັບລູກຊາຍຂອງລາວ, ແລະ ພີ່ນ້ອງຂອງລາວສິບສອງຄົນ.
[13]ສະຫລາກທີ່ຫົກຕົກຖືກບຸກກີຢາ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;[14]ສະຫລາກທີ່ເຈັດຕົກຖືກເຢຊາເຣລາ,
ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;[15]ສະຫລາກທີ່ແປດຕົກຖືກເຢຊາຢາ, ພ້ອມກັບລູກຊາຍຂອງລາວ ແລະ
ພີ່ນ້ອງຂອງລາວສິບສອງຄົນ;[16]ສະຫລາກທີ່ເກົ້າຕົກຖືກຕານີຢາ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;
[17]ທີ່ສິບຕົກຖືກຊີເມອີ, ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ;[18]ທີ່ສິບເອັດຕົກຖືກອັດຊາເຣນ, ພ້ອມກັບລູກຊາຍຂອງລາວ
ແລະ ພີ່ນ້ອງຂອງລາວສິບສອງຄົນ;[19]ທີ່ສິບສອງຕົກຖືກຮາຊາບີຢາ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;
[20]ທີ່ສິບສາມຕົກຖືກຊູບາເອນ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;
[21]ທີ່ສິບສີ່ຕົກຖືກມັດຕີທີຢາ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;[22]ທີ່ສິບຫ້າຕົກຖືກເຢເຣໂມດ,
ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;[23]ທີ່ສິບຫົກຕົກຖືກຮານານີຢາ; ພ້ອມກັບລູກຊາຍຂອງລາວ ແລະ
ພີ່ນ້ອງຂອງລາວສິບສອງຄົນ;[24]ທີ່ສິບເຈັດຕົກຖືກໂຢຊະເບກາຊາ, ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ;
[25]ທີ່ສິບແປດຕົກຖືກຮານານີ, ພ້ອມກັບລູກຊາຍຂອງລາວ, ແລະ ພີ່ນ້ອງຂອງລາວສິບສອງຄົນ;[26]ທີ່ສິບເກົ້າຕົກຖືກມັນໂລທີ,
ພ້ອມກັບລູກຊາຍຂອງລາວ, ແລະ ພີ່ນ້ອງຂອງລາວສິບສອງຄົນ;[27]ທີ່ຊາວຕົກຖືກເອລີອາທາ, ພ້ອມກັບລູກຊາຍຂອງລາວ, ແລະ
ພີ່ນ້ອງຂອງລາວສິບສອງຄົນ;[28]ທີ່ຊາວເອັດຕົກຖືກໂຮທີ, ພ້ອມກັບລູກຊາຍຂອງລາວ ແລະ ພີ່ນ້ອງຂອງລາວສິບສອງຄົນ;
[29]ທີ່ຊາວສອງຕົກຖືກກິດດັນຕີ, ພ້ອມກັບລູກຊາຍຂອງລາວ. ແລະ ພີ່ນ້ອງຂອງລາວສິບສອງຄົນ;[30]ທີ່ຊາວສາມຕົກຖືກມາຮາຊີໂອດ,
ພ້ອມກັບລູກຊາຍຂອງລາວ, ແລະ ພີ່ນ້ອງຂອງລາວສິບສອງຄົນ;[31]ທີ່ຊາວສີ່ຕົກຖືກໂຣມາມຕີເອເຊີ, ພ້ອມກັບລູກຊາຍຂອງລາວ, ແລະ
ພີ່ນ້ອງຂອງລາວສິບສອງຄົນ.

 generated on Tue Jun 17 19:01:42 2025

26 [1]ນີ້ຄືແຜນການທັງຫລາຍຂອງຝ່າຍກອງເຝົ້າຍາມປະຕູ: ແມ່ນຈາກພວກໂກຣາມີ, ເມເຊເລມີຢາລູກຊາຍໂກເຣ,
ຈາກລູກຫລານຂອງອາສັບ.[2]ເມເຊເລມີຢາມີລູກຊາຍຄື: ເຊຄາຣີຢາລູກກົກ, ເຢດີອາເອນຜູ້ທີສອງ, ເຊບາດີຢາຜູ້ທີສາມ, ຢາດນີເອນຜູ້ທີສີ່,
[3]ເອລາມຜູ້ທີຫ້າ, ເຢໂຮຮານັນຜູ້ທີຫົກ, ເອລີເອໂຮນາຍຜູ້ທີເຈັດ.

[4]ໂອເບັດເອໂດມມີລູກຊາຍຄື: ເຊມາຢາເປັນລູກກົກ, ເຢໂຮຊາບັດຜູ້ທີສອງ, ໂຢອາຜູ້ທີສາມ, ສາກາຜູ້ທີສີ່, ເນທາເນນຜູ້ທີຫ້າ,[5]ອຳມີເອັນຜູ້ທີຫົກ,
ອິດຊາຄາຜູ້ທີເຈັດ, ເປອູເລທາຍຜູ້ທີແປດ ເພາະວ່າພຣະເຈົ້າໄດ້ອຳນວຍພຣະພອນໃຫ້ແກ່ໂອເບັດເອໂດມ.
[6]ພ້ອມທັງເຊມາຢາລູກຊາຍຂອງເພິ່ນດ້ວຍ ຊຶ່ງມີລູກຊາຍຫລາຍຄົນເກີດແກ່ລາວເປັນຜູ້ປົກຄອງໃນຄອບຄົວພໍ່ຂອງພວກເຂົາ;
ເພາະພວກເຂົາເປັນຄົນມີອຳນາດ ແລະ ກ້າຫານ.
[7]ລູກຊາຍຂອງເຊມາກີຢາຄື, ໂອທະນີ, ເຣຟາເອນ, ໂອເບັດ ແລະ ເອນຊາບັດ. ພີ່ນ້ອງຂອງລາວເປັນຄົນທີ່ມີຄວາມກ້າຫານຄື ເອລີຮູ ແລະ
ເຊມາກີຢາ.[8]ຄົນທັງຫມົດເຫລົ່ານີ້ເປັນລູກຫລານຂອງໂອເບັດເອໂດມ. ທັງລາວເອງກັບລູກຊາຍ ແລະພີ່ນ້ອງຂອງລາວເປັນຄົນທີ່ມີຄວາມສາມາດ,
ມີກຳລັງເຫມາະສົມແກ່ການບົວຣະບັດ. ໂດຍມາຈາກໂອເບັດເອໂດມຫົກສິບສອງຄົນ.[9]ເມເຊເລມີຢາມີລູກຊາຍ ແລະ
ພີ່ນ້ອງເປັນຄົນທີ່ມີກຳລັງຄວາມສາມາດສິບແປດຄົນ.
[10]ໂຮສາ, ຜູ້ເປັນລູກຫລານຂອງເມຣາຣີມີ, ລູກຊາຍຄື: ຊິມຣີຜູ້ເປັນຫົວຫນ້າ (ເຖິງລາວຈະບໍ່ແມ່ນລູກຫົວປີ,
ພໍ່ຂອງລາວກໍໃຫ້ລາວເປັນຫົວຫນ້າ),[11]ຮິນກີຢາຜູ້ທີສອງ, ເຕບາລີຢາຜູ້ທີສາມ, ເຊຄາຣີຢາຜູ້ທີສີ່ລູກຊາຍ ແລະ
ພີ່ນ້ອງຂອງໂຮສາທັງຫມົດມີສິບສາມຄົນ.
[12]ພະແນກທັງຫລາຍຂອງຄົນເຝົ້າຍາມປະຕູ, ພວກຫົວຫນ້າຂອງພວກເຂົາມີຫນ້າທີ່ເຊັ່ນດຽວກັບພີ່ນ້ອງ
ຂອງພວກເຂົາໃນການບົວຣະບັດໃນພຣະວິຫານຂອງພຣະຢາເວ.[13]ພວກເຂົາຈັບສະຫລາກກັນຕາມຄອບຄົວບັນພະບຸຣຸດຂອງພວກເຂົາ
ທັງຜູ້ນ້ອຍ ແລະ ຜູ້ໃຫຍ່ກໍເຮັດຄືກັນ ສຳລັບວ່າໃຜຢູ່ແຕ່ລະປະຕູ.[14]ເມື່ອສະຫລາກນັ້ນຖືກຈັບສຳຈັບປະຕູດ້ານຕາເວັນອອກ
ສະຫລາກນັ້ນໄດ້ຕົກຖືກເຊເລມີຢາ. ເພິ່ນຈັບສະຫລາກໃຫ້ລູກຊາຍຂອງເພິ່ນຄື ເຊຄາຣີຢາ, ລາວເປັນທີ່ປຶກສາທີ່ສະຫລຽວສະຫລາດ, ແລະ
ສະຫລາກຂອງລາວຕົກຖືກດ້ານເຫນືອ.
[15]ສະຫລາກທາງທິດໃຕ້ໄດ້ຕົກຖືກໂອເບັດເອໂດມ, ແລະ ສາງເກັບມ້ຽນສິ່ງຂອງນັ້ນຈັດໃຫ້ລູກຊາຍຂອງເພິ່ນເບິ່ງແຍງ.
[16]ສະຫລາກດ້ານຕາເວັນຕົກນັ້ນຕົກຖືກຊຸບປີມ ແລະ ໂຮສາ ທີ່ປະຕູຊັນເລເກັດ, ຂຶ້ນໄປຕາມຖະຫນົນ.
ມີຜູ້ເຝົ້າຍາມຕິດຕໍ່ກັນໄປສຳລັບແຕ່ລະຄອບຄົວ.
[17]ດ້ານຕາເວັນອອກມີຄົນເລວີຫົກຄົນ, ດ້ານເຫນືອທຸກມື້ມີສີ່ຄົນ, ດ້ານໃຕ້ມື້ລະສີ່ຄົນທຸກມື້, ແລະ ມີສອງຄູ່ຍາມຢູ່ທີ່ສາງເຄື່ອງ.
[18]ສຳລັບລະບຽງທາງຕາເວັນຕົກນັ້ນ ມີສີ່ຄົນຢູ່ທີ່ຖນົນ, ແລະ ສອງຄົນຍາມຢູ່ທີ່ລະບຽງ.[19]ຄົນເຫລົ່ານີ້ເປັນພວກເຝົ້າຍາມປະຕູ
ຊຶ່ງມາຈາກລູກຫລານຂອງໂກຣາ ແລະລູກຫລານຂອງເມຣາຣີ.
[20]ຈາກຄົນເລວີນັ້ນ, ອາຮີຢາເປັນຜູ້ເບິ່ງແຍງຄັງພຣະວິຫານຂອງພຣະເຈົ້າ ແລະ ຄັງສິ່ງຂອງຖວາຍຂອງພຣະຢາເວ.[21]ລູກຫລານຂອງລາດານ,
ພວກລູກຫລານຄົນເກໂຊນຂອງລາດານ, ຜ່ານທາງເຂົາ ແລະ ຜູ້ຊຶ່ງເປັນຫົວຫນ້າບັນພະບຸຣຸດຂອງລາດານຄື ເຢຮີເອລີຄົນເກໂຊນ ແລະ
ພວກລູກຊາຍຂອງເຂົາ.[22]ເຊທາມ, ແລະ ໂຢເອນນ້ອງຊາຍຂອງລາວ, ຊຶ່ງເປັນຜູ້ເບິ່ງແຍງຄັງພຣະວິຫານຂອງພຣະຢາເວ.
[23]ມີພວກຮັກສາຄວາມປອດພັຍຈາກພວກຕະກູນຂອງອຳຣາມ, ຄົນອິດຊະຮາ, ຄົນເຮັບໂຣນ, ແລະ ຈາກຄົນອຸດຊີເອນ.[24]ເຊບູເອນ
ລູກຊາຍຂອງເກໂຊມ ຜູ້ເປັນລູກຊາຍຂອງໂມເຊ, ຊຶ່ງເປັນຜູ້ດູແລຄັງທັງຫລາຍ.[25]ພີ່ນ້ອງຂອງລາວ ຊາວເອລີເອເຊຄື ເຣຮາບີຢາລູກຊາຍລາວ,
ລູກຊາຍຂອງເຣຮາບີຢາຄືເຢຊາຢາ, ລູກຊາຍຂອງເຢຊາຢາຄືໂຢຣາມ, ລູກຊາຍຂອງໂຢຣາມຄື ຊິກຣີ, ແລະ ລູກຊາຍຂອງຊິກຣີຄືເຊໂລມິດ.
[26]ເຊໂລມິດ ແລະ ພີ່ນ້ອງຂອງລາວເປັນຜູ້ເບິ່ງແຍງຄັງເຄື່ອງຖວາຍທັງຫມົດ ຊຶ່ງເປັນຂອງພຣະຢາເວ, ກະສັດດາວິດ ແລະ
ບັນດາບັນພະບຸຣຸດທັງຫລາຍທີ່ເປັນຫົວຫນ້າ ແລະ ນາຍພັນນາຍຮ້ອຍ ພ້ອມທັງຜູ້ບັນຊາການກອງທັບໄດ້ມອບຖວາຍໄວ້.
[27]ພວກເພິ່ນໄດ້ແຍກສິ່ງທີ່ຍຶດມາໄດ້ຈາກສົງຄາມ ພວກເພິ່ນໄດ້ມອບຖວາຍເພື່ອການສ້ອມແປງພຣະວິຫານຂອງພຣະຢາເວ.
[28]ພວກເຂົາໄດ້ຮັບຜິດຊອບທຸກທີ່ແຍກໄວ້ຕ່າງຫາກເພື່ອພຣະຢາເວ ໂດຍຊາມູເອນຜູ້ທຳນວາຍ, ຊາອູນລູກຊາຍກີເຊ, ອັບເນລູກຊາຍເນ, ແລະ
ໂຢອາບລູກຊາຍນາງເຊຣູຢາ. ທຸກຢ່າງທີ່ຖືກແຍກໄວ້ຕ່າງຫາກເພື່ອພຣະຢາເວຢູ່ພາຍໃຕ້ການເບິ່ງແຍງຂອງເຊໂລມິດ ແລະ ພີ່ນ້ອງຂອງລາວ.
[29]ຈາກຄົນອິດຊະຮາ, ເກນານີຢາ ແລະ ຫລານຂອງລາວໄດ້ຮັບແຕ່ງຕັ້ງໃຫ້ມີຫນ້າທີ່ຮັບຜິດຊອບນອກເຂດສຳລັບຄວບຄຸມອິສະຣາເອນ.
ໂດຍໃຫ້ເປັນເຈົ້າຫນ້າທີ່ ແລະ ເປັນຜູ້ຕັດສິນ.[30]ຈາກຄົນເຮັບໂຣນ; ຮາຊາບີຢາ ແລະ
ພີ່ນ້ອງຂອງລາວເປັນຄົນທີ່ມີຄວາມກ້າຫານມີຫນຶ່ງພັນເຈັດຮ້ອຍຄົນ, ໂດຍເປັນຜູ້ເບິ່ງແຍງກິຈະການທັງຫມົດຂອງພຣະຢາເວ ແລະ
ຣາຊະການຂອງກະສັດ. ພວກເຂົາຢູ່ທາງຝາກຕາເວັນຕົກຂອງແມ່ນ້ຳຢໍແດນຝາກນັ້ນ.
[31]ຈາກລູກຫລານຂອງເຮັບໂຣນຄື, ເຢຣີຢາເປັນຫົວຫນ້າພວກລູກຫລານຂອງເຂົາ,
ໄດ້ນັບຈາກບັນຊີລາຍຊື່ຂອງຄອບຄົວທັງຫລາຍຂອງພວກເຂົາ. ໃນປີທີສີ່ສິບຂອງຣາຊະການດາວິດ ພວກເຂົາໄດ້ສຳຫລວດບັນທຶກຕ່າງໆ
ແລະພົບວ່າທ່າມກາງພວກເຂົາໄດ້ພົບຄົນທີ່ມີຄວາມສາມາດ ແລະ ກ້າຫານໃນເມືອງຢາເຊ ແຂວງກິເລອາດ.
[32]ເຢຣີຢາມີພີ່ນ້ອງສອງພັນເຈັດຮ້ອຍຄົນຄືເປັນຫົວຫນ້າຄອບຄົວທີ່ກ້າຫານ. ກະສັດດາວິດໄດ້ແຕ່ງຕັ້ງໃຫ້ເພິ່ນໃຫ້ເປັນຜູ້ເບິ່ງແຍງຄົນຣູເບັນ, ແລະ
ຄົນຄາດ, ແລະ ຄົນຕະກູນມານາເຊເຄິ່ງຫນຶ່ງ ໃນກິຈະການທຸກຢ່າງກ່ຽວກັບພຣະເຈົ້າ, ແລະ ກິຈະການກ່ຽວກັບກະສັດ.

# 27

1ຕໍ່ໄປນີ້ເປັນລາຍຊື່ຂອງຫົວໜ້າຄອບຄົວອິສະຣາເອນ, ບັນດາບັນພະບຸຣຸດທີ່ເປັນຫົວໜ້າບັນດານາຍພັນ, ນາຍຮ້ອຍ ແລະ
ບັນດາເຈົ້າໜ້າທີ່ຜູ້ຮັບໃຊ້ກະສັດໃນຣາຊະການທຸກຢ່າງ. ກອງທະຫານ. ແຕ່ລະສ່ວນຮັບໃຊ້ເດືອນຕໍ່ເດືອນຕະຫລອດປີ. ກອງເວນຍາມໜຶ່ງ
ມີຜູ້ຊາຍຈຳນວນສອງໝື່ນສີ່ພັນຄົນ. 2ຫົວໜ້າຂອງກອງເວນຍາມທຳອິດທີ່ປະຈຳການໃນເດືອນທີໜຶ່ງແມ່ນຢາໂຊເບອາມ ລູກຊາຍຊັບດີເອນ.
ໃນກອງເວນຍາມຂອງລາວມີສອງໝື່ນສີ່ພັນຄົນ. 3ລາວມາຈາກລູກຫລານຂອງເປເຣັດ ແລະ
ເປັນຫົວໜ້າຜູ້ບັນຊາການກອງທັບທັງໝົດໃນເດືອນທຳອິດ.

4ຫົວໜ້າຂອງກອງເວນຍາມທີ່ເຂົ້າປະຈຳການໃນເດືອນທີສອງແມ່ນໂດດາຍ, ຈາກເຊື້ອສາຍຂອງຄົນອາໂຮອາ.
ມີກໂລດເປັນທີສອງໃນສ່ວນຂອງລາວ. ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ.
5ຜູ້ບັງຄັບບັນຊາການກອງທັບຄົນທີສາມສຳລັບເດືອນທີສາມຄືເບນາຢາ ລູກຊາຍເຢໂຮຢາດາ, ຊຶ່ງເປັນຫົວໜ້າປະໂລຫິດຄົນໜຶ່ງ ແລະ ຜູ້ນຳ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ. 6ເບນາຢາ ເປັນຄົນທີ່ເຂັ້ມແຂງກ້າຫານໃນຈຳນວນສາມສິບຄົນ,
ແລະເປັນຜູ້ບັນຊາການຂອງສາມສິບຄົນນັ້ນ. ອຳມີດຊາບັດ ລູກຊາຍຂອງລາວກໍຢູ່ໃນກອງເວນຂອງລາວ.
7ຜູ້ບັນຊາການຄົນທີສີ່ສຳລັບເດືອນທີສີ່ແມ່ນອາສາເຮນ ນ້ອງຊາຍຂອງໂຢອາບ. ເຊບາດີຢາ ລູກຊາຍຂອງລາວເປັນຜູ້ຮອງຈາກລາວ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ. 8ຜູ້ບັນຊາການຄົນທີຫ້າສຳລັບເດືອນທີຫ້າຄື ຊາມຮູດຄົນອິດຊະຣາ, ລູກຫລານຂອງອິດຊະຣາ,
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ. 9ຜູ້ບັນຊາການຄົນທີຫົກສຳລັບເດືອນທີຫົກຄື ອີຣາ, ລູກຊາຍອີກເກດຊາວເຕໂກອາ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ.
10ຜູ້ບັນຊາການຜູ້ທີເຈັດສຳລັບເດືອນທີເຈັດຄື ເຮເລັດຊາວເປໂລນ, ເປັນຄົນເອຟຣາອິມ. ໃນກອງເວນຍາມຂອງລາວ ມີສອງໝື່ນສີ່ພັນຄົນ.
11ຜູ້ບັນຊາການຜູ້ທີແປດສຳລັບເດືອນທີແປດຄື ສິບເບກາຍຊາວຮູຊາຍ ຊາວຫຸຊາ, ຈາກຕະກູນລູກຫລານຂອງຄົນເຊຣາ.
ໃນກອງເວນຂອງລາວມີ ສອງໝື່ນສີ່ພັນຄົນ. 12ຜູ້ບັນຊາການຜູ້ທີເກົ້າສຳລັບເດືອນທີເກົ້າຄື ອາບີເອເຊຊາວ, ອານາໂທດ ຄົນເບັນຢາມິນ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ.
13ຜູ້ບັນຊາການຜູ້ທີສິບສຳລັບເດືອນທີສິບຄື ມາຮາຣາຍຊາວເນໂຕຟາ, ຈາກຕະກູນທີ່ສືບເຊື້ອສາຍຈາກຄົນເຊຣາ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ. 14ຜູ້ບັນຊາການຜູ້ທີສິບເອັດສຳລັບເດືອນທີສິບເອັດຄື ເບນາຢາຊາວປີຣາໂທນ, ຈາກຄົນເອຟຣາອິມ.
ໃນກອງເວນຂອງລາວມີສອງໝື່ນສີ່ພັນ. ຄົນ 15ຜູ້ບັນຊາການຜູ້ທີສິບສອງສຳລັບເດືອນທີສິບສອງຄື ເຮນດາຍຊາວເນໂຕຟາ,
ຈາກຕະກູນທີ່ສືບເຊື້ອສາຍມາຈາກຄົນໂອດນີເອນ. ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ.
16ຫົວໜ້າຕະກູນຕ່າງໆຂອງອິສະຣາເອນຄື: ເອລີເອເຊ ລູກຊາຍຊິກຣີເປັນຫົວໜ້າຄົນຣູເບັນ,
ເຊຟາຕີຢາລູກຊາຍມາອາກາເປັນຫົວໜ້າຄົນຊີເມໂອນ. 17ຮາຊາບີຢາລູກຊາຍເກມູເອນເປັນຫົວໜ້າຄົນເລວີ, ແລະ
ຊາໂດກເປັນຫົວໜ້າເຫລົ່າເຊື້ອສາຍຂອງຄົນອາໂຣນ. 18ເອລີຮູ
ອ້າຍຄົນໜຶ່ງຂອງດາວິດເປັນຫົວໜ້າຄົນຢູດາມີອົມຣີລູກຊາຍມີກາເອນເປັນຫົວໜ້າຄົນອິດຊາຄາ.
19ອີຊະມາຢາລູກຊາຍໂອບາດີຢາເປັນຫົວໜ້າຄົນເຊບູລູນ. ເຢເຣໂມດລູກຊາຍອັດຊະຣີເອນເປັນຫົວໜ້າຄົນນັບທາລີ.
20ໂຮເຊອາລູກຊາຍອາຊາຊີຢາ ເປັນຫົວໜ້າຄົນເອຟຣາອິມ. ໂຢເອນລູກຊາຍເປດາຢາເປັນຫົວໜ້າມານາເຊເຄິ່ງຕະກູນ.
21ສຳລັບມານາເຊເຄິ່ງຕະກູນໃນກິເລອາດ, ແມ່ນອິດໂດລູກຊາຍເຊຄາຣີຢາເປັນຫົວໜ້າ.
ຢາອາສີເອນລູກຊາຍອັບເນເປັນຫົວໜ້າສຳລັບຄົນເບັນຢາມິນ. 22ສຳລັບຄົນດານແມ່ນ, ອັດຊາເຣນລູກຊາຍເຢໂຣຮາມເປັນຫົວໜ້າ.
ຄົນເຫລົ່ານີ້ເປັນຫົວໜ້າຕະກູນຕ່າງໆຂອງອິສະຣາເອນ.
23ດາວິດບໍ່ໄດ້ນັບຈຳນວນຄົນທີ່ມີອາຍຸຕໍ່າກວ່າຊາວປີ, ເພາະພຣະຢາເວໄດ້ກ່າວໄວ້ວ່າ,
ພຣະອົງຈະເຮັດໃຫ້ພວກອິສະຣາເອນເພີ່ມທະວີຫລາຍຂຶ້ນເຫມືອນດັ່ງດວງດາວທັງຫລາຍໃນທ້ອງຟ້າ.
24ໂຢອາບລູກຊາຍນາງເຊຣູຢາໄດ້ເລີ່ມຕົ້ນນັບ, ແຕ່ບໍ່ສຳເລັດ. ຍ້ອນເຫດການນີ້ ພຣະພິໂຣດຈຶ່ງຢູ່ເຫນືອຊາວອິສະຣາເອນ.
ໃນຈຳນວນທີ່ນັບນັ້ນບໍ່ໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດດາວິດ.
25ອາຊະມາເວດລູກຊາຍອາດີເອນເປັນຜູ້ຮັບຜິດຊອບຄັງເງິນຂອງກະສັດ. ໂຢນາທານລູກຊາຍຂອງອຸດຊີຢາ ເປັນຜູ້ຮັບຜິດຊອບຄັງນອກນະຄອນ,
ໃນຫົວເມືອງ, ແລະ ໃນຊົນນະບົດ ແລະ ໃນບັນດາປ້ອມຍາມ. 26ເອຊະຣີລູກຊາຍເກລຸບ ເປັນຜູ້ເບິ່ງແຍງບັນດາຜູ້ທີ່ເຮັດໄຮ່ເຮັດນາຂອງກະສັດ,
ບັນດາຄົນເຫລົ່ານັ້ນຜູ້ໄຖແຜ່ນດິນ. 27ຊີເມອີຊາວຣາມາດປະຈຳການເບິ່ງແຍງສວນອະງຸ່ນ ແລະ
ຊັບດີຈາກຊາວຊິບເບິ່ງແຍງຜະລິດຜົນຂອງສວນອະງຸ່ນ ແລະ ຫ້ອງເກັບນ້ຳອະງຸ່ນ.
28ບາອານຮານານຊາວເກເດເປັນຜູ້ເບິ່ງແຍງຕົ້ນໝາກກອກເທດ ແລະ ຕົ້ນໝາກເດືອທີ່ຢູ່ຕາມທົ່ງພຽງ, ແລະ ໂຢອາດເປັນຜູ້ເບິ່ງແຍງຄັງນ້ຳມັນ.
29ຊິດຣາຍຊາວຊາໂຣນເບິ່ງແຍງຝູງງົວ ແລະ ຕ້ອນຝູງງົວໄປກິນຫຍ້າຢູ່ທີ່ຊາໂຣນ, ຊາຟາດລູກຊາຍອາດະລາຍເບິ່ງແຍງຝູງງົວທີ່ຢູ່ຕາມຮ່ອມພູ.
30ໂອບິນຄົນອິຊະມາເອນເບິ່ງແຍງຝູງອູດ, ແລະ ເຢເດຢາຊາວເມໂຣໂນດເບິ່ງແຍງລາໂຕແມ່. ຢາຊິດຊາວຮັກຣີເບິ່ງແຍງຝູງແບ້.
31ບັນດາຄົນເຫລົ່ານີ້ເປັນພະນັກງານທີ່ດູແລເບິ່ງແຍງຊັບສົມບັດຂອງກະສັດດາວິດ.
32ໂຢນາທານ, ລຸງຂອງດາວິດເປັນທີ່ປຶກສາ, ເປັນຄົນທີ່ມີຄວາມເຂົ້າໃຈ ແລະ ເປັນເລຂາ.
ເຢຮີເອນລູກຊາຍຮັກໂມນີເປັນຜູ້ເບິ່ງແຍງລ້ຽງດູພວກລູກຊາຍ. 33ອາຮີໂທເຟັນເປັນທີ່ປຶກສາຂອງກະສັດ, ແລະ
ຮູຊາຍຄົນອາຄີເປັນທີ່ປຶກສາສ່ວນຕົວຂອງກະສັດ. 34ເຢໂຮຢາດາລູກຊາຍເບນາຢາ, ແລະອາບີອາທາເປັນຜູ້ເຮັດວຽກຕໍ່ຈາກອາຮີໂທເຟັນ.
ໂຢອາບເປັນຜູ້ບັນຊາການກອງທັບຂອງກະສັດ.

 generated on Tue Jun 17 19:01:42 2025

28 [1]ດາວິດໄດ້ເອີ້ນບັນດາເຈົ້ານາຍທັງຫມົດຂອງອິສະຣາເອນມາປະຊຸມໃນອິສະຣາເອນຄື: ຫົວຫນ້າຂອງຕະກູນ,
ຜູ້ບັນຊາການກອງທັບທີ່ຮັບຣາຊະການຕາມການເວນຍາມ, ນາຍພັນນາຍຮ້ອຍ, ພະນັກງານທັງຫມົດ ພວກທີ່ເບິ່ງແຍງຊັບສິນບັດ ແລະ
ຝູງສັດຂອງກະສັດ, ແລະ ລູກຊາຍຂອງພະອົງ, ພ້ອມກັບພະນັກງານຣາຊະສຳນັກ ແລະ ທະຫານທີ່ເກັ່ງກ້າສາມາດ,
ລວມເຖິງວິຣະບຸຣຸດທັງຫມົດຂອງພວກເຂົາ.

[2]ແລ້ວກະສັດດາວິດໄດ້ລຸກຢືນຂຶ້ນ ແລະ ກ່າວວ່າ, “ພີ່ນ້ອງຂອງຂ້າພະເຈົ້າ ແລະ ປະຊາຊົນຂອງຂ້າພະເຈົ້າ ຂໍຈົ່ງຟັງຂ້າພະເຈົ້າ.
ຂ້າພະເຈົ້າມີໃຈປະສົງທີ່ຈະສ້າງພຣະວິຫານ ຊຶ່ງເປັນບ່ອນພັກຂອງຫີບພັນທະສັນຍາຂອງພຣະຢາເວ;
ເພື່ອເປັນທີ່ຮອງພຣະບາດຂອງພຣະເຈົ້າຂອງພວກເຮົາ, ແລະ ຂ້າພະເຈົ້າໄດ້ຈັດຕຽມເພື່ອການກໍ່ສ້າງໄວ້ສຳເລັດແລ້ວ.
[3]ແຕ່ພຣະເຈົ້າກ່າວກັບຂ້າພະເຈົ້າວ່າ, ‘ເຈົ້າຢ່າສ້າງວິຫານເພື່ອນາມຂອງເຮົາເລີຍ, ເພາະເຈົ້າເປັນນັກຮົບ ແລະ ໄດ້ເຮັດໃຫ້ເລືອດໄຫລອອກ.’
[4]ເຖິງປານນັ້ນກໍຕາມ, ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ໄດ້ເລືອກຂ້າພະເຈົ້າຈາກຄອບຄົວບັນພະບຸຣຸດຂອງຂ້າພະເຈົ້າທັງຫມົດໃຫ້ເປັນກະສັດປົກຄອງອິສະຣາເອນສືບໄປເປັນນິດ.
ເພາະພຣະອົງໄດ້ເລືອກຢູດາໃຫ້ເປັນຫົວຫນ້າ. ໃນເຊື້ອສາຍຂອງຢູດາ, ແລະ ຄອບຄົວບັນພະບຸຣຸດຂອງຂ້າພະເຈົ້າ,
ໃນບັນດາລູກຊາຍຂອງພໍ່ຂ້າພະເຈົ້າ, ພຣະອົງໄດ້ພໍພຣະທັຍໃນ ຂ້າພະເຈົ້າ ແລະ ໄດ້ໃຫ້ຂ້າພະເຈົ້າເປັນກະສັດປົກຄອງອິສະຣາເອນທັງປວງ.
[5]ແຕ່ພຣະຢາເວໄດ້ປຣະທານລູກຊາຍເປັນຈຳນວນຫລາຍແກ່ຂ້າພະເຈົ້າ, ພຣະອົງໄດ້ເລືອກໂຊໂລໂມນ,
ລູກຊາຍຂອງຂ້າພະເຈົ້າໃຫ້ນັ່ງບັນລັງແຫ່ງຣາຊະອານາຈັກຂອງພຣະຢາເວ, ປົກຄອງຊາວອິສະຣາເອນ.
[6]ພຣະອົງກ່າວກັບຂ້າພະເຈົ້າວ່າ, ‘ໂຊໂລໂມນລູກຊາຍຂອງເຈົ້າຈະກໍ່ສ້າງວິຫານຂອງເຮົາ ແລະ ເດີ່ນລານວິຫານຂອງເຮົາ,
ເພາະເຮົາໄດ້ເລືອກລາວໃຫ້ເປັນລູກຂອງເຮົາ ແລະ ເຮົາຈະເປັນພໍ່ຂອງລາວ.
[7]ເຮົາຈະສະຖາປະນາຣາຊະອານາຈັກຂອງລາວໃຫ້ຕັ້ງຫມັ້ນຄົງຢູ່ສືບໄປເປັນນິດ, ຖ້າລາວຈະຕັ້ງຫມັ້ນຄົງຢູ່ໃນການປະຕິບັດຕາມຄຳສັ່ງ ແລະ
ພຣະບັນຍັດທັງຫລາຍຂອງເຮົາ, ເຫມືອນກັບທີ່ລາວໄດ້ເຮັດຢູ່ໃນມື້ນີ້.’
[8]ເພາະສະນັ້ນ, ບັດນີ້ໃນສາຍຕາຂອງບັນດາຊາວອິສະຣາເອນ, ທີ່ເປັນຊຸມນຸມຊົນຂອງພຣະຢາເວແຫ່ງນີ້, ແລະ
ໃນການປຣະທັບຢູ່ຂອງພຣະເຈົ້າ, ເຮົາທ່ານທັງຫລາຍຈົ່ງປະພຶດຕາມ ແລະ
ຖືຮັກສາພຣະບັນຍັດທັງຫມົດຂອງພຣະຢາເວພຣະເຈົ້າຂອງພວກເຈົ້າ. ຈົ່ງກະທຳຢ່າງນີ້ເພື່ອເຈົ້າຈະໄດ້ແຜ່ນດິນອັນດີນີ້ເປັນກຳມະສິດ ແລະ
ມອບໄວ້ໃຫ້ເປັນມໍຣະດົກຂອງລູກຫລານຜູ້ມາພາຍຫລັງ ເຈົ້າສືບໄປເປັນນິດ.
[9]ສ່ວນເຈົ້າ, ໂຊໂລໂມນລູກຂອງເຮົາເອີຍ, ຈົ່ງເຊື່ອຟັງພຣະເຈົ້າຂອງພໍ່ເຈົ້າ, ແລະ ຈົ່ງບົວຣະບັດພຣະອົງດ້ວຍໃຈຈິງ ແລະ
ດ້ວຍຄວາມເຕັມໃຈຂອງເຈົ້າ. ຈົ່ງກະທຳຢ່າງນີ້ ເພາະພຣະຢາເວໄດ້ພິຈາຣະນາຈິດໃຈທັງປວງ ແລະ
ໄດ້ເຂົ້າໃຈໃນແຮງຈູງໃຈຂອງຄວາມຄິດທັງປວງຂອງທຸກຄົນ. ຖ້າເຈົ້າຊອກຫາພຣະອົງ, ເຈົ້າຈະພົບພຣະອົງ, ແຕ່ຖ້າເຈົ້າປະຖິ້ມພຣະອົງ,
ພຣະອົງຈະໄດ້ຖິ້ມເຈົ້າອອກໄປເປັນນິດ.[10]ບັດນີ້ ຈົ່ງຟັງໃຫ້ດີ ເພາະວ່າຢາເວໄດ້ເລືອກເຈົ້າໃຫ້ກໍ່ສ້າງພຣະວິຫານ ເພື່ອເປັນສະຖານທີ່ບໍຣິສຸດ.
ຈົ່ງເຂັ້ມແຂງ ແລະ ເຮັດໃຫ້ສຳເລັດເຖີດ.”
[11]ແລ້ວດາວິດໄດ້ມອບແຜນຜັງໃຫ້ກັບໂຊໂລໂມນລູກຊາຍຂອງພະອົງ, ຊຶ່ງແຜນຜັງຫໍປະຕູຂອງພຣະວິຫານ ແລະ
ແຜນຜັງຫ້ອງຕ່າງໆຂອງພຣະວິຫານນັ້ນ, ຄັງ, ຫ້ອງຊັ້ນເທິງ, ບັນດາຫ້ອງຊັ້ນໃນ, ແລະ ກັບຫ້ອງສຳລັບບ່ອນນັ່ງແຫ່ງພຣະຄຸນ.
[12]ພຣະອົງໄດ້ຊົງມອບແຜນຜັງທຸກແຜນຜັງທີ່ກະສັດໄດ້ຮັບດ້ວຍພຣະວິນຍານ ວ່າດ້ວຍເດີ່ນຂອງພຣະວິຫານຂອງພຣະຢາເວ, ແລະ
ບັນດາຫ້ອງລະບຽງອ້ອມຮອບ, ແລະ ຄັງສຳລັບພຣະວິຫານຂອງພຣະເຈົ້າ, ແລະ ຄັງສຳລັບບັນດາເຄື່ອງຖວາຍທີ່ເປັນຂອງພຣະຢາເວ.
[13]ພຣະອົງໄດ້ຊົງມອບກົດລະບຽບຕ່າງໆ ສຳລັບສ່ວນຂອງບັນດາປະໂລຫິດກັບຄົນເລວີ,
ເພື່ອງານບົວຣະບັດທັງຫມົດໃນພຣະວິຫານຂອງພຣະຢາເວ, ແລະ
ສຳລັບບັນດາເຄື່ອງຮັບໃຊ້ໃນວຽກງານບົວຣະບັດໃນພຣະວິຫານຂອງພຣະຢາເວ.
[14]ພະອົງໄດ້ສັ່ງນ້ຳຫນັກທອງຄຳຂອງເຄື່ອງໃຊ້ທອງຄຳທຸກຢ່າງທີ່ໃຊ້ໃນການບົວຣະບັດແຕ່ລະຢ່າງ ແລະ ກຳນົດສັ່ງນ້ຳຫນັກເງິນ,
ສຳລັບເຄື່ອງໃຊ້ເງິນທຸກຢ່າງໃນວຽກງານບົວຣະບັດແຕ່ລະຢ່າງ.[15]ລາຍລະອຽດຕໍ່ໄປນີ້ໄດ້ຖືກກຳນົດໂດຍນ້ຳຫນັກ, ລວມທັງລາຍລະອຽດສຳລັບ,
ສັ່ງນ້ຳຫນັກເຄື່ອງຮອງຕະກຽງທອງຄຳ ແລະຕະກຽງທອງຄຳ, ນ້ຳຫນັກຂອງເຄື່ອງຮອງຕະກຽງແຕ່ລະອັນກັບຕະກຽງແຕ່ລະຫນ່ວຍ;
ນ້ຳຫນັກເງິນຂອງຄັນຕະກຽງ ທັງຄັນ,ແລະ ຕະກຽງກັບຕະກຽງນັ້ນ, ແລະ ຕາມທີ່ຈະໃຊ້ຄັນຕະກຽງແຕ່ລະອັນ.
[16]ສັ່ງນ້ຳຫນັກທອງຄຳສຳລັບໂຕະເຂົ້າຈີ່ຕໍ່ຫນ້າພຣະພັກແຕ່ລະຫນ່ວຍ, ເງິນສຳລັບໂຕະເງິນ.
[17]ໄດ້ຊົງກຳນົດນ້ຳຫນັກທອງຄຳບໍຣິສຸດສຳຫລັບພວກຊ້ອມແທງເນື້ອ, ພວກອ່າງ ພວກຈອກ.
ໄດ້ກຳນົດນ້ຳຫນັກຂອງຖ້ວຍທອງຄຳແຕ່ລະຫນ່ວຍກັບນ້ຳຫນັກທອງຄຳຂອງແຕ່ລະຫນ່ວຍ ແລະ ນ້ຳຫນັກຂອງຖ້ວຍເງິນຂອງແຕ່ລະຫນ່ວຍ.
[18]ແທ່ນເຄື່ອງຫອມເຮັດດ້ວຍທອງຄຳເນື້ອລະອຽດ, ແລະ ນ້ຳຫນັກທອງຄຳສຳລັບອອກແບບຂອງພວກເຄຣຸບ
ຊຶ່ງກາງປີກອອກປົກຫີບພຣະສັນຍາຂອງພຣະຢາເວ.[19]ດາວິດກ່າວວ່າ,
“ສິ່ງທັງປວງເຫລົ່ານີ້ພຣະຢາເວໄດ້ເຮັດໃຫ້ຂ້າພະເຈົ້າເຂົ້າໃຈໂດຍອາໄສລາຍພຣະຫັດຂອງພຣະອົງຢູ່ເທິງຂ້າພະເຈົ້າ
ຊຶ່ງການງານທຸກຢ່າງຈະຕ້ອງເຮັດຕາມແຜນຜັງນັ້ນ.”
[20]ແລ້ວດາວິດກ່າວກັບໂຊໂລໂມນລູກຊາຍຂອງຕົນວ່າ, “ຈົ່ງເຂັ້ມແຂງ ແລະ ກ້າຫານ. ເຮັດໃຫ້ສຳເລັດສາ. ຢ່າຢ່າຢ້ານ ຫລື ກັງວົນເລີຍ,
ເພາະວ່າພຣະຢາເວຄືພຣະເຈົ້າຂອງເຮົາ, ໄດ້ສະຖິດຢູ່ກັບເຈົ້າ. ພຣະອົງຈະບໍ່ປ່ອຍໃຫ້ເຈົ້າລົ້ມເຫລວ ຫລື
ປະຖິ້ມເຈົ້າຈົນກວ່າວຽກງານກໍ່ສ້າງທັງຫມົດແຫ່ງພຣະວິຫານຂອງພຣະຢາເວຈະສຳເລັດ.[21]ເບິ່ງແມ໋, ມີຫນ່ວຍງານຂອງພວກປະໂລຫິດ ແລະ
ຄົນເລວີ ຈະຢູ່ກັບເຈົ້າໃນການບົວຣະບັດທຸກຢ່າງແຫ່ງພຣະວິຫານຂອງພຣະເຈົ້າ. ຄົນທັງຫລາຍທີ່ມີນ້ຳໃຈຮັບຜິດຊອບ ແລະ
ມີຄວາມຊຳນານໃນວຽກງານນີ້ກໍຈະມີຢູ່ກັບເຈົ້າ, ເພື່ອຊ່ວຍເຈົ້າເຮັດວຽກ ແລະ ປະຕິບັດງານ. ພວກຫົວຫນ້າ ແລະ
ປະຊາຊົນທັງປວງກໍຈະຢູ່ພາຍໃຕ້ຄຳບັນຊາຂອງເຈົ້າ.”

 generated on Tue Jun 17 19:01:42 2025

29 [1]ກະສັດດາວິດກ່າວກັບພວກຊຸມນຸມຊົນທັງຫມົດວ່າ, “ໂຊໂລໂມນລູກຊາຍຂອງເຮົາ, ຊຶ່ງເປັນຜູ້ດຽວທີ່ພຣະເຈົ້າໄດ້ເລືອກໄວ້ນັ້ນ,
ກໍຍັງເປັນຄົນຫນຸ່ມຢູ່ ແລະ ຍັງບໍ່ທັນມີຄວາມຊໍານານ, ແລະ ການງານກໍໃຫຍ່ໂຕຫລາຍ. ເພາະວ່າມະຫາວິຫານນັ້ນ
ບໍ່ແມ່ນສໍາລັບມະນຸດແຕ່ສໍາລັບພຣະຢາເວ.[2]ເພາະສະນັ້ນ,
ເຮົາຈຶ່ງຈັດຕຽມໄວ້ສໍາລັບພຣະວິຫານຂອງພຣະເຈົ້າຂອງເຮົາດ້ວຍເຕັມຄວາມສາມາດຂອງເຮົາຄື ທອງຄໍາສໍາລັບສິ່ງທີ່ເຮັດດ້ວຍທອງຄໍາ,
ເງິນສໍາລັບສິ່ງທີ່ເຮັດດ້ວຍເງິນ, ທອງເຫລືອງສໍາລັບສິ່ງທີ່ເຮັດດ້ວຍທອງເຫລືອງ, ແລະ ເຫລັກສໍາລັບສິ່ງທີ່ເຮັດດ້ວຍເຫລັກ, ແລະ
ໄມ້ສໍາລັບສິ່ງທີ່ເຮັດດ້ວຍໄມ້. ຂ້າພະເຈົ້າໃຫ້ຫີນແກ້ວ, ໂມຣາ ແລະ ພອຍສໍາລັບຝັງທີ່ຈະບັນຈຸເຂົ້າກັບຫີນແກ້ວເຫລື້ອມໃສ,
ກັບຫີນແກ້ວສີຕ່າງໆທຸກຢ່າງ ເພັດພອຍທຸກຊະນິດ ແລະ ຫີນອ່ອນຢ່າງຫລວງຫລາຍ.

[3]ຫລາຍໄປກວ່ານັ້ນອີກ, ນອກຈາກສິ່ງທັງປວງທີ່ເຮົາໄດ້ຈັດຫາໄວ້ສໍາລັບວິຫານຂອງພຣະເຈົ້າແລ້ວ, ຂ້າພະເຈົ້າໄດ້ຖວາຍທອງຄໍາ ແລະ
ເງິນເປັນສົມບັດ. ຂ້າພະເຈົ້າເຮັດສິ່ງທັງຫມົດເຫລົ່ານີ້ ເພື່ອເປັນນການຕຽມໃນການສ້າງພຣະວິຫານບໍຣິສຸດຂອງຂອງເຮົາທັງຫລາຍ:[4]ມີຄືດັ່ງນີ້
ທອງຄໍາສາມພັນຕະລັນຕົນເປັນທອງຄໍາເມືອງໂອຟີ, ແລະ ເງິນບໍຣິສຸດທີ່ຫລອມແລ້ວເຈັດພັນຕະລັນຕົນ, ເພື່ອຈະຕົບແຕ່ງຝາພຣະວິຫານ.
[5]ເຮົາໄດ້ຖວາຍທອງຄໍາສໍາລັບສິ່ງທີ່ເຮັດດ້ວຍທອງຄໍາ, ແລະ ເງິນສໍາລັບສິ່ງທີ່ເຮັດດ້ວຍເງິນ, ແລະ
ສໍາລັບວຽກງານທັງຫມົດທີ່ຊ່າງຈະຕ້ອງເຮັດດ້ວຍມື. ໃນມື້ນີ້ມີໃຜແດ່ທີ່ຈະເຕັມໃຈຖວາຍສິ່ງຂອງພ້ອມກັບຖວາຍຕົວແດ່ພຣະຢາເວ?”
[6]ແລ້ວເຈົ້ານາຍຂອງບັນພະບຸຣຸດ ບັນດາຫົວຫນ້າຂອງຕະກູນແຫ່ງອິສະຣາເອນ, ທັງນາຍພັນນາຍຮ້ອຍ
ແລະພະນັກງານເບິ່ງແຍງຣາຊະການກໍໄດ້ເອົາສິ່ງຂອງມາຖວາຍດ້ວຍຄວາມເຕັມໃຈ.
[7]ພວກເຂົາຖວາຍເພື່ອງານບົວຣະບັດແຫ່ງພຣະວິຫານຂອງພຣະເຈົ້າ ເປັນທອງຄໍາຫ້າພັນຕະລັນຕົນ ແລະຫນຶ່ງຫມື່ນດາຣິກ,
ເງິນຫນຶ່ງຫມື່ນຕະລັນຕົນ, ທອງເຫລືອງຫນຶ່ງຫມື່ນແປດພັນຕະລັນຕົນ, ແລະເຫລັກຫນຶ່ງແສນຕະລັນຕົນ.
[8]ຜູ້ໃດທີ່ມີເພັດພອຍກໍຖວາຍໄວ້ທີ່ຄັງພຣະວິຫານຂອງພຣະຢາເວ, ໃນຄວາມເບິ່ງແຍງຂອງເຢຮີເອນຄົນເກໂຊນ.
[9]ແລ້ວປະຊາຊົນກໍຊົມຊື່ນຍິນດີທີ່ພວກເຂົາໄດ້ຖວາຍສິ່ງເຫລົ່ານີ້ຕາມຄວາມສະມັກໃຈຂອງພວກເຂົາ, ແລະ
ພວກເຂົາຖວາຍດ້ວຍຄວາມເຕັມໃຈແດ່ພຣະຢາເວ. ກະສັດດາວິດກໍໄດ້ຊື່ນຊົມຍິນດີຢ່າງໃຫຍ່ຫລວງໃນການນັ້ນ.
[10]ດັ່ງນັ້ນ ດາວິດໄດ້ສັນຣະເສີນພຣະຢາເວຕໍ່ຫນ້າຊຸມນຸມຊົນທັງປວງ. ດາວິດທູນວ່າ, “ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ
ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ, ສາທຸການແດ່ພຣະອົງສືບໄປເປັນນິດ.[11]ຂ້າແດ່ພຣະຢາເວ, ຄວາມຍິ່ງໃຫຍ່, ຣິດທານຸພາບ,
ສະຫງ່າຣາສີ, ໄຊຍະຊະນະ ແລະ ຄວາມງົດງາມເປັນຂອງພຣະອົງ. ບັນດາສິ່ງທີ່ມີຢູ່ໃນຟ້າສະຫວັນ ແລະໃນແຜ່ນດິນໂລກເປັນຂອງພຣະອົງ.
ຂ້າແດ່ພຣະຢາເວ ຣາຊະອານາຈັກເປັນຂອງພຣະອົງ, ແລະ ພຣະອົງໄດ້ເປັນທີ່ຍົກຍ້ອງສັນຣະເສີນ, ເປັນຈອມຣາຊາຂອງສິ່ງສາຣະພັດ.
[12]ທັງຄວາມຮັ່ງມີ ແລະ ກຽດຕິຍົດມາຈາກພຣະອົງ ແລະພຣະອົງໄດ້ຄອບຄອງຢູ່ເຫນືອທຸກສິ່ງ. ຣິດທານຸພາບ ແລະ
ຣິດອໍານາດທີ່ຍິ່ງໃຫຍ່ຢູ່ໃນພຣະຫັດຂອງພຣະອົງ. ພຣະຫັດຂອງພຣະອົງມີອໍານາດທີ່ຈະເຮັດໃຫ້ທຸກສິ່ງຈະເຣີນຂຶ້ນ ແລະ ຕັ້ງຫມັ້ນຄົງຢູ່.[13]ບັດນີ້,
ຂ້າພະອົງທັງຫລາຍໂມທະນາຂອບພຣະຄຸນພຣະອົງຜູ້ເປັນພຣະເຈົ້າຂອງຂ້ານ້ອຍ ແລະ ສັນຣະເສີນພຣະນາມອັນຮຸ່ງເຮືອງຂອງພຣະອົງ.
[14]ແຕ່ຂ້າພຣະອົງເປັນຜູ້ໃດ, ແລະ ຊົນຊາດຂອງຂ້າພຣະອົງເປັນຜູ້ໃດ, ທີ່ຂ້າພຣະອົງທັງຫລາຍຈະສາມາດຖວາຍແດ່ພຣະອົງ
ດ້ວຍຄວາມເຕັມໃຈເຊັ່ນນີ້? ເພາະວ່າ ສິ່ງຂອງທຸກຢ່າງມາຈາກພຣະອົງ, ແລະ ສິ່ງຂອງທີ່ອອກມາຈາກພຣະຫັດຂອງພຣະອົງ
ພວກຂ້າພຣະອົງທັງຫລາຍໄດ້ນໍາມາຖວາຍແດ່ພຣະອົງເທົ່ານັ້ນ.
[15]ເພາະວ່າຂ້າພຣະອົງທັງຫລາຍເປັນຄົນຕ່າງດ້າວທ້າວຕ່າງແດນຕໍ່ພຣະພັກພຣະອົງ, ແລະ
ເປັນຄົນອາໄສຢູ່ຊົ່ວຄາວດັ່ງທີ່ບັນພະບຸຣຸດຂອງຂ້າພຣະອົງໄດ້ເປັນຢ່າງນັ້ນມາແລ້ວ.
ວັນເດືອນປີຂອງພວກຂ້າພຣະອົງເທິງແຜ່ນດິນໂລກເປັນເຫມືອນເງົາ ແລະ ບໍ່ມີຄວາມຫມັ້ນຄົງແນ່ນອນ.
[16]ຂ້າແດ່ພຣະຢາເວ, ພຣະເຈົ້າຂອງຂ້າພຣະອົງທັງຫລາຍ, ວັດຖຸທີ່ຫລວງຫລາຍເຫລົ່ານີ້ທັງຫມົດ
ຊຶ່ງຂ້າພຣະອົງໄດ້ຈັດຫາເພື່ອກໍ່ສ້າງພຣະວິຫານຖວາຍແດ່ພຣະອົງ ເພື່ອພຣະນາມອັນບໍຣິສຸດຂອງພຣະອົງ—
ທຸກຢ່າງກໍມາຈາກພຣະຫັດຂອງພຣະອົງ ແລະ ເປັນຂອງພຣະອົງທັງຫມົດ.[17]ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ, ຂ້າພຣະອົງຮູ້ແນ່ວ່າ
ພຣະອົງໄດ້ທົດລອງເບິ່ງຈິດໃຈ ແລະ ໄດ້ພໍພຣະທັຍໃນຄວາມທ່ຽງທັມ. ສ່ວນຂ້າພຣະອົງ,
ໄດ້ຖວາຍທຸກສິ່ງເຫລົ່ານີ້ທັງຫມົດດ້ວຍຄວາມເຕັມໃຈໃນຄວາມສັດຊື່ແຫ່ງຈິດໃຈຂອງຂ້າພຣະອົງ, ແລະ
ບັດນີ້ຂ້າພຣະອົງຊື່ນໃຈຍິນດີທີ່ໄດ້ເຫັນປະຊາຊົນຂອງພຣະອົງຜູ້ຊຶ່ງຢູ່ທີ່ນີ້ໄດ້ເຕັມໃຈຖວາຍແດ່ພຣະອົງ.
[18]ຂ້າແດ່ພຣະຢາເວ, ພຣະເຈົ້າຂອງອັບຣາຮາມ ອີຊາກ ແລະອິສະຣາເອນ—ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍ—
ຂໍພຣະອົງໄດ້ຮັກສາຄວາມປະສົງ ແລະ ຄວາມຄິດໃນໃຈຂອງປະຊາຊົນຂອງພຣະອົງໃຫ້ເປັນເຊັ່ນນີ້ສະເຫມີໄປ.
ຂໍໄດ້ຕັ້ງຈິດໃຈຂອງພວກເຂົາໃຫ້ຫມັ້ນຄົງໃນພຣະອົງ.
[19]ຂໍພຣະອົງໄດ້ໂຜດໂຊໂລໂມນລູກຊາຍຂອງຂ້າພຣະອົງໃຫ້ມີຈິດໃຈສັດຊື່ທີ່ຈະຮັກສາບັນດາພຣະບັນຍັດຂອງພຣະອົງ,
ພຣະໂອວາດຂອງພຣະອົງ, ແລະກົດເກນຂອງພຣະອົງ, ແລະ ໃຫ້ເຮັດທຸກຢ່າງເຫລົ່ານີ້
ທັງກໍ່ສ້າງພຣະວິຫານຕາມທີ່ຂ້າພຣະອົງໄດ້ກະກຽມໄວ້ແລ້ວນັ້ນ.”
[20]ແລ້ວດາວິດກ່າວກັບຊຸມນຸມຊົນທັງປວງວ່າ, “ຈົ່ງຖວາຍສາທຸການແດ່ພຣະຢາເວພຣະເຈົ້າຂອງທ່ານທັງຫລາຍ.”
ຊຸມນຸມຊົນທັງປວງກໍສັນຣະເສີນພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ, ກົ້ມຫົວຂອງພວກເຂົາລົງນະມັດສະການພຣະຢາເວ
ແລະ ຖວາຍກຽດແດ່ກະສັດ.[21]ໃນເຊົ້າມື້ຕໍ່ມາ, ພວກເຂົາໄດ້ຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າ ແລະ ຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ.
ພວກເຂົາໄດ້ຖວາຍເປັນງົວເຖິກຫນຶ່ງພັນໂຕ, ແກະຜູ້ຫນຶ່ງພັນໂຕ, ແລະ ລູກແກະຫນຶ່ງພັນໂຕພ້ອມກັບເຄື່ອງດື່ມບູຊາ ແລະ
ຖວາຍສັດບູຊາຢ່າງຫລວງຫລາຍ ເພື່ອຊາວອິສະຣາເອນທັງປວງ.
[22]ໃນວັນນັ້ນ, ພວກເຂົາໄດ້ກິນໄດ້ດື່ມຕໍ່ພຣະພັກພຣະຢາເວ ດ້ວຍການສະຫລອງທີ່ຍິ່ງໃຫຍ່. ພວກເຂົາໄດ້ຕັ້ງ ໂຊໂລໂມນ,
ລູກຊາຍຂອງດາວິດເປັນກະສັດເປັນເທື່ອທີ່ສອງ, ແລະ ພວກເຂົາໄດ້ເຈີມພະອົງໄວ້ໃຫ້ເປັນເຈົ້ານາຍພາຍໃຕ້ອໍານາດຂອງພຣະຢາເວ.

 generated on Tue Jun 17 19:01:42 2025

ພວກເຂົາໄດ້ເຈີມຊາໂດກໃຫ້ເປັນປະໂລຫິດ. 23 ແລ້ວໂຊໂລໂມນໄດ້ປະທັບເທິງພະທີ່ນັ່ງຂອງພຣະຢາເວເປັນກະສັດແທນດາວິດພໍ່ຂອງຕົນ.
ພະອົງໄດ້ຈະເຣີນຂຶ້ນ, ແລະ ອິສະຣາເອນທັງປວງກໍເຊື່ອຟັງພະອົງ.
24 ບັນດາເຈົ້ານາຍທັງປວງ, ທະຫານທີ່ເກັ່ງກ້າທັງຫລາຍ, ແລະ ບັນດາລູກຊາຍຂອງກະສັດດາວິດໄດ້ປະຕິຍານຕົວຕໍ່ກະສັດໂຊໂລໂມນ.
25 ພຣະຢາເວໄດ້ປຣະທານຊື່ສຽງທີ່ຍິ່ງໃຫຍ່ແກ່ໂຊໂລໂມນເປັນພິເສດໃນສາຍຕາຂອງອິສະຣາເອນທັງປວງ ແລະ
ໄດ້ປຣະທານຄວາມອຸດົມຮັ່ງມີຂອງກະສັດໃຫ້ແກ່ພະອົງຢ່າງທີ່ບໍ່ມີກະສັດອົງໃດໃນອິສະຣາເອນທີ່ຢູ່ກ່ອນພະອົງໄດ້ຮັບ.
26 ຝ່າຍດາວິດລູກຊາຍເຢຊີໄດ້ປົກຄອງອິສະຣາເອນທັງປວງ. 27 ເວລາທີ່ພະອົງໄດ້ປົກຄອງອິສະຣາເອນນັ້ນ ເປັນເວລາສີ່ສິບປີ.
ພະອົງໄດ້ປົກຄອງໃນເຮັບໂຣນເຈັດປີ ແລະ ໄດ້ ປົກຄອງໃນນະຄອນເຢຣູຊາເລັມສາມສິບສາມປີ. 28 ພະອົງໄດ້ຕາຍເມື່ອເຖົ້າແກ່ຫລາຍແລ້ວ,
ຫລັງຈາກທີ່ໄດ້ມີຊີວິດຍືນຍາວ, ທັງໄດ້ຮັ່ງມີ ແລະ ມີກຽດ. ໂຊໂລໂມນລູກຊາຍຂອງພະອົງໄດ້ປົກຄອງແທນພະອົງ.
29 ສ່ວນພະຣາຊະກິດຂອງກະສັດດາວິດ ຕັ້ງແຕ່ຕົ້ນຈົນສຸດທ້າຍໄດ້ບັນທຶກໄວ້ໃນຫນັງສືຂອງຊາມູເອນຜູ້ທຳນວາຍ, ແລະ
ໃນຫນັງສືປະຫວັດສາດຂອງນາທານຜູ້ທຳນວາຍ, ແລະ ໃນຫນັງສືປະຫວັດສາດຂອງຄາດຜູ້ທຳນວາຍ.
30 ໄດ້ມີການບັນທຶກເລື່ອງລາວການປົກຄອງຂອງເພິ່ນທັງຫມົດ, ອຳນາດຂອງເພິ່ນ ແລະ ເລື່ອງລາວທີ່ບັງເກີດຂຶ້ນກັບເພິ່ນ, ອິສະຣາເອນ, ແລະ
ທັງບັນດາຣາຊະອານາຈັກທັງຫມົດຂອງປະເທດຕ່າງໆ.

# 2 ຂ່າວຄາວ

1 1 ໂຊໂລໂມນລູກຊາຍຂອງດາວິດໄດ້ຊົງເຮັດໃຫ້ຣາຊະອານາຈັກຂອງພະອົງເຂັ້ມແຂງ, ແລະ
ພຣະຢາເວພຣະເຈົ້າຂອງພະອົງຊົງສະຖິດຢູ່ກັບພະອົງ ແລະ ຊົງເຮັດໃຫ້ພະອົງຍິ່ງໃຫຍ່.

2 ໂຊໂລໂມນກ່າວກັບອິສະຣາເອນທັງປວງ, ກັບນາຍພັນ ແລະ ນາຍຮ້ອຍ ທັງກັບຜູ້ພິພາກສາ ແລະ ກັບເຈົ້ານາຍທັງປວງໃນອິສະຣາເອນທັງຫມົດ,
ຜູ້ເປັນຫົວຫນ້າຂອງບັນພະບຸຣຸດຂອງພວກເຂົາ. 3 ໂຊໂລໂມນ ແລະ
ຊຸມນຸມຊົນທັງປວງທີ່ຢູ່ກັບພະອົງໄດ້ຂຶ້ນໄປທີ່ປູຊະນີຍະສະຖານສູງຊຶ່ງຢູ່ທີ່ກິເບໂອນ, ເພາະຫໍເຕັນແຫ່ງຊຸມນຸມຂອງພຣະເຈົ້າ,
ຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຢາເວ, ໄດ້ສ້າງຂຶ້ນໃນຖິ່ນແຫ້ງແລ້ງກັນດານ ຢູ່ບ່ອນນັ້ນ 4 ແຕ່ດາວິດໄດ້ນຳຫີບຂອງພຣະເຈົ້າຂຶ້ນມາຈາກ ກີຣິຢາດ
ເຢອາຣິມ ເຖິງສະຖານທີ່ຊຶ່ງດາວິດໄດ້ຊົງຕຽມໄວ້ໃຫ້, ເພາະພະອົງໄດ້ຊົງຕັ້ງເຕັນໄວ້ໃຫ້ໃນເມືອງເຢຣູຊາເລັມ. 5 ຫລາຍກວ່ານັ້ນ,
ແທ່ນບູຊາທອງເຫລືອງຊຶ່ງເບຊາເລນລູກຊາຍອູຣີຜູ້ເປັນລູກຊາຍຮູເຣໄດ້ສ້າງໄວ້ນັ້ນ ກໍຢູ່ຕໍ່ຫນ້າຫໍເຕັນຂອງພຣະຢາເວ; ໂຊໂລໂມນ ແລະ
ຊຸມນຸມຊົນກໍໄດ້ສະແຫວງຫາພຣະເຈົ້າ.
6 ໂຊໂລໂມນສະເດັດຂຶ້ນໄປບ່ອນນັ້ນຄືແທ່ນບູຊາທອງເຫລືອງຕໍ່ພຣະພັກພຣະຢາເວ, ຊຶ່ງຢູ່ທີ່ຫໍເຕັນແຫ່ງຊຸມນຸມ, ແລະ
ຊົງຖວາຍເຄື່ອງເຜົາບູຊາຫນຶ່ງພັນໂຕເທິງແທ່ນນັ້ນ. 7 ໃນຄືນນັ້ນພຣະເຈົ້າຊົງປະກົດແກ່ໂຊໂລໂມນ ແລະ ກ່າວກັບພະອົງວ່າ
"ເຈົ້າຢາກໃຫ້ເຮົາໃຫ້ອັນໃດແກ່ເຈົ້າ? ກໍຈົ່ງຂໍສາ!"
8 ໂຊໂລໂມນທູນພຣະເຈົ້າວ່າ, "ພຣະອົງໄດ້ຊົງສຳແດງຄວາມຮັກອັນຫມັ້ນຄົງ ແລະ ຄວາມເມດຕາອັນຍິ່ງໃຫຍ່ແກ່ດາວິດ ພໍ່ຂອງຂ້າພະອົງ, ແລະ
ຊົງໃຫ້ຂ້າພະອົງປົກຄອງແທນ. 9 ບັດນີ້, ຂ້າແດ່ພຣະຢາເວ, ຂໍໃຫ້ພຣະສັນຍາຂອງພຣະອົງທີ່ມີຕໍ່ດາວິດ ພໍ່ຂອງຂ້າພະອົງເປັນຈິງ,
ເພາະພຣະອົງໄດ້ຊົງຕັ້ງໃຫ້ຂ້າພະອົງເປັນກະສັດເຫນືອຊົນຊາດທີ່ຫລາຍຄືຂີ້ຝຸ່ນດິນແຫ່ງແຜ່ນດິນໂລກ. 10 ຂໍຊົງປຣະທານສະຕິປັນຍາ ແລະ
ຄວາມຮູ້ແກ່ຂ້າພະອົງ, ເພື່ອຂ້າພະອົງຈະນຳຊົນຊາດນີ້,
ເພາະມີຜູ້ໃດບໍ່ທີ່ຈະພິພາກສາປະຊາຊົນຂອງພຣະອົງອັນຫລວງຫລາຍນັ້ນໄດ້?" 11 ພຣະເຈົ້າກ່າວຕອບໂຊໂລໂມນວ່າ,
"ເພາະວ່າສິ່ງນີ້ຢູ່ໃນຈິດໃຈຂອງເຈົ້າ, ແລະ ເຈົ້າບໍ່ໄດ້ຂໍຊັບສົມບັດຄວາມຮັ່ງມີ, ກຽດ ຫລື ຊີວິດຂອງຄົນເຫລົ່ານັ້ນທີ່ກຽດຊັງເຈົ້າ, ແລະ
ບໍ່ໄດ້ຂໍຊີວິດໃຫ້ຍືນຍາວ, ແຕ່ໄດ້ຂໍສະຕິປັນຍາ ແລະ ຄວາມຮູ້ເພື່ອຕົວເຈົ້າເອງ, ເພື່ອເຈົ້າຈະພິຈາຣະນາປະຊາຊົນຂອງເຮົາ,
ຜູ້ຊຶ່ງເຮົາໄດ້ຕັ້ງເຈົ້າໃຫ້ເປັນກະສັດເຫນືອພວກເຂົານັ້ນ, ແລະ ສິ່ງນີ້ຄືສິ່ງທີ່ເຮົາຈະກະທຳ.
12 ເຮົາປຣະທານສະຕິປັນຍາ ແລະ ຄວາມຮູ້ໃຫ້ແກ່ເຈົ້າ. ເຮົາຈະໃຫ້ຊັບສົມບັດ ຄວາມຮັ່ງມີ ແລະ ກຽດແກ່ເຈົ້າ,
ຢ່າງທີ່ບໍ່ມີກະສັດອົງໃດຜູ້ຢູ່ກ່ອນເຈົ້າໄດ້ມີ, ແລະ ບໍ່ມີຜູ້ໃດພາຍຫລັງເຈົ້າຈະມີຄືກັບເຈົ້າອີກ." 13 ດັ່ງນັ້ນ
ໂຊໂລໂມນຈຶ່ງສະເດັດຈາກບ່ອນນະມັສະການທີ່ກິເບໂອນ, ຈາກຕໍ່ຫນ້າຫໍເຕັນແຫ່ງຊຸມນຸມໄປເມືອງເຢຣູຊາເລັມ;
ພະອົງຊົງປົກຄອງຢູ່ເຫນືອອິສຣາເອນ.
14 ໂຊໂລໂມນຊົງທ້ອນໂຮມຣົດຮົບ ແລະ ພົນທະຫານມ້າ, ແລະ ພະອົງຊົງມີຣົດຮົບ 1,400 ຄັນ ແລະ ພົນທະຫານມ້າຫນຶ່ງຫມື່ນສອງພັນຄົນ
ຊຶ່ງພະອົງຊົງໃຫ້ປະຈຳຢູ່ທີ່ຫົວເມືອງ, ແລະ ຣົດຮົບຢູ່ພຣະອົງເອງ, ກະສັດໃນເມືອງເຢຣູຊາເລັມ. 15 ກະສັດຊົງເຮັດໃຫ້ເງິນ ແລະ
ຄຳເປັນຂອງສາມັນໃນເມືອງເຢຣູຊາເລັມເຫມືອນກ້ອນຫີນ, ແລະ ຊົງເຮັດໃຫ້ມີໄມ້ສົນຫລວງຫລາຍເຫມືອນໄມ້ຫມາກເດື່ອຂອງຮ່ອມພູເຂົາ.
16 ມ້າອັນເປັນສິນຄ້າຂາເຂົ້າຂອງໂຊໂລໂມນມາຈາກເອຢິບເປັນຝູງ ແລະ ເມືອງຄູເອ, ບັນດາພໍ່ຄ້າຂອງກະສັດຮັບມາເປັນຝູງຕາມລາຄາ.
17 ພວກເຂົາທັງຫລາຍນຳຣົດຮົບເຂົ້າມາຈາກເອຢິບຄັນຫນຶ່ງເປັນເງິນຫົກຮ້ອຍເຊເຂເງິນ, ແລະ ມ້າໂຕຫນຶ່ງ150 ເຊເຂ. ດັ່ງນັ້ນ
ໂດຍທາງພວກພໍ່ຄ້າ ພວກເຂົາກໍສົ່ງອອກໄປໃຫ້ບັນດາກະສັດຂອງຄົນຮິດຕີ ແລະ ບັນດາກະສັດຂອງຄົນອາຣາມີອານ.

 generated on Tue Jun 17 19:01:42 2025

## 2

1ບັດນີ້ຝ່າຍໂຊໂລໂມນຊົງຕັ້ງພະໄທທີ່ຈະສ້າງພຣະວິຫານເພື່ອພຣະນາມຂອງພຣະຢາເວ ແລະ ສ້າງຣາຊະວັງເພື່ອຣາຊະອານາຈັກຂອງພະອົງ.
2ໂຊໂລໂມນຊົງກຳນົດໃຫ້ຜູ້ຊາຍເຈັດຫມື່ນຄົນເປັນຄົນຂົນເຄື່ອງ, ແລະ ໃຫ້ຜູ້ຊາຍແປດຫມື່ນຄົນສະກັດຫີນທີ່ເທິງພູເຂົາ, ແລະ ໃຫ້ຜູ້ຊາຍ
3.600 ຄົນເບິ່ງແຍງພວກເຂົາທັງຫລາຍ. 3ໂຊໂລໂມນຊົງສົ່ງຣາຊະສານໄປຫາ ຮູຣາມ, ກະສັດເມືອງຕີເຣວ່າ,
"ທ່ານໄດ້ເຮັດທຸຣະກິດກັບດາວິດພໍ່ຂອງຂ້າພະເຈົ້າຄື ໄດ້ສົ່ງໄມ້ສົນໃຫ້ພະອົງ ເພື່ອສ້າງວັງໃຫ້ພະອົງ, ທ່ານສັນຍາຢ່າງໃດ
ຂໍທ່ານໄດ້ເຮັດແກ່ຂ້າພະເຈົ້າຢ່າງນັ້ນດ້ວຍ.

4ເບິ່ງແມ, ຂ້າພະເຈົ້າກຳລັງຈະສ້າງພຣະວິຫານເພື່ອພຣະນາມຊື່ພຣະຢາເວພຣະເຈົ້າຂອງຂ້າພະເຈົ້າ, ແລະ ມອບຖວາຍແກ່ພຣະອົງ,
ເພື່ອເຜົາເຄື່ອງຫອມຕໍ່ພຣະພັກພຣະອົງ, ເພື່ອເຂົ້າຈີ່ຕັ້ງຖວາຍຕະຫລອດໄປເປັນນິດ, ແລະ ເພື່ອເຄື່ອງເຜົາບູຊາທັງເຊົ້າ ແລະ ແລງ,
ໃນວັນສະບາໂຕ ແລະ ໃນວັນເດືອນອອກໃຫມ່, ແລະວັນເທສະການຕາມກຳນົດຂອງພຣະຢາເວພຣະເຈົ້າຂອງເຮົາ.
ຊຶ່ງເປັນກົດຕັ້ງໄວ້ຕະຫລອດໄປເປັນນິດ, ສຳລັບອິສະຣາເອນ. 5ພຣະວິຫານທີ່ຂ້າພະເຈົ້າຈະສ້າງນັ້ນໃຫຍ່ຫລວງ,
ເພາະວ່າພຣະເຈົ້າຂອງເຮົາຍິ່ງໃຫຍ່ກວ່າພະເຈົ້າທັງປວງ.
6ແຕ່ຜູ້ໃດຫນໍທີ່ຈະສາມາດສ້າງພຣະວິຫານສຳລັບພຣະອົງໄດ້, ໃນເມື່ອທົ່ວຈັກກະວານ ແລະ ຟ້າສະຫວັນທີ່ສູງທີ່ສຸດຮັບຮອງພຣະອົງໄວ້ກໍບໍ່ໄດ້?
ຂ້າພະເຈົ້າເປັນຜູ້ໃດຫນໍທີ່ຈະສ້າງພຣະວິຫານສຳລັບພຣະອົງ, ນອກຈາກໃຫ້ເປັນບ່ອນເຜົາເຄື່ອງບູຊາຕໍ່ພຣະພັກພຣະອົງເທົ່ານັ້ນ? 7ເພາະສະນັ້ນ
ບັດນີ້ຂໍສົ່ງຊາຍຄົນຫນຶ່ງຜູ້ຊຳນານການຊ່າງຄຳ, ເງິນ, ທອງເຫລືອງ, ເຫລັກ ແລະຊຳນານໃນເລື່ອງຜ້າສີມ່ວງ, ສີແດງເຂັ້ມ, ແລະ ສີຟ້າ,
ທັງເປັນຜູ້ຊຳນານໃນການແກະສະຫລັກ ເພື່ອຈະຢູ່ກັບຊ່າງຝີມືຜູ້ຢູ່ກັບຂ້າພະເຈົ້າໃນຢູດາ ແລະ ໃນເຢຣູຊາເລັມ,
ຜູ້ທີ່ດາວິດພໍ່ຂອງຂ້າພະເຈົ້າໄດ້ຈັດຫາໄວ້.
8ຂໍທ່ານສົ່ງໄມ້ສົນ, ໄມ້ແປກ, ແລະ ໄມ້ດູ່ຈາກເລບານອນໃຫ້ຂ້າພະເຈົ້າດ້ວຍ, ເພາະຂ້າພະເຈົ້າຮູ້ວ່າ
ຂ້າຣາຊະການຂອງທ່ານຮູ້ຈັກການຕັດໄມ້ໃນເລບານອນ. ເບິ່ງແມ, ຂ້າຣາຊະການຂອງຂ້າພະເຈົ້າຈະຢູ່ກັບຂ້າຣາຊະການຂອງທ່ານ,
9ເພື່ອຈັດຕຽມໄມ້ໃຫ້ແກ່ຂ້າພະເຈົ້າໃຫ້ໄດ້ຫລວງຫລາຍ, ເພາະວ່າພຣະວິຫານທີ່ຂ້າພະເຈົ້າຈະສ້າງນີ້ຈະໃຫຍ່ ແລະ ແປກປະຫລາດຫລາຍ.
10ເບິ່ງແມ, ສ່ວນຂ້າຣາຊະການຂອງທ່ານ, ຄືຜູ້ທີ່ຕັດໄມ້ນັ້ນ, ຂ້າພະເຈົ້າຈະໃຫ້ເຂົ້າສາລີນວດແລ້ວສອງຫມື່ນໂຄລະ ເຂົ້າບາເລສອງຫມື່ນໂຄລະ,
ນ້ຳອະງຸ່ນສອງຫມື່ນບັດ, ແລະນ້ຳມັນສອງຫມື່ນບັດ ແກ່ພວກເຂົາທັງຫລາຍ."
11ແລ້ວຮູຣາມ, ກະສັດແຫ່ງເມືອງຕີເຣ, ຊົງຕອບເປັນລາຍພຣະຫັດ, ຊຶ່ງພະອົງຊົງມີໄປເຖິງໂຊໂລໂມນວ່າ:
"ເພາະວ່າພຣະຢາເວຊົງຮັກປະຊາຊົນຂອງພຣະອົງ, ພຣະອົງຈຶ່ງຊົງເຮັດໃຫ້ທ່ານເປັນກະສັດເຫນືອພວກເຂົາທັງຫລາຍ." 12ຮູຣາມກ່າວອີກວ່າ,
"ສາທຸການແດ່ພຣະຢາເວພຣະເຈົ້າແຫ່ງອິສະຣາເອນ, ຜູ້ຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ,
ຜູ້ໄດ້ປຣະທານລູກຊາຍທີ່ສະຫລາດຄົນຫນຶ່ງແກ່ດາວິດ, ປະກອບດ້ວຍຄວາມສະຫລຽວສະຫລາດ ແລະ ມີຄວາມເຂົ້າໃຈ,
ຜູ້ຊຶ່ງຈະສ້າງພຣະວິຫານຖວາຍພຣະຜູ້ເປັນເຈົ້າ ແລະ ສ້າງພະຣາຊະວັງເພື່ອຣາຊະອານາຈັກຂອງພະອົງ.
13ບັດນີ້ ຂ້າພະເຈົ້າໄດ້ສົ່ງຊ່າງຝີມືຄົນຫນຶ່ງ, ປະກອບດ້ວຍຄວາມເຂົ້າໃຈຄື ຮູຣາມ, ທີ່ປຶກສາອາວຸໂສ. 14ລາວເປັນລູກຊາຍຂອງຍິງຄົນດານ.
ພໍ່ຂອງລາວເປັນຊາວເມືອງຕີເຣ. ລາວຊຳນານງານຊ່າງຄຳ, ເງິນ, ທອງເຫລືອງ, ເຫລັກຫີນ ແລະ ໄມ້, ແລະ ເຮັດວຽກຊ່າງຜ້າສີມ່ວງ, ສີຟ້າ,
ຜ້າປ່ານເນື້ອລະອຽດ ແລະ ຜ້າສີແດງເຂັ້ມ. ແກະສະຫລັກທຸກຊະນິດ ແລະ ສ້າງຕາມແບບລວດລາຍໃດທີ່ຈະກຳນົດໃຫ້ແກ່ລາວ.
ພ້ອມກັບຊ່າງຝີມືຂອງລາວ ຄືຊ່າງຝີມືຂອງດາວິດ, ພໍ່ຂອງພະອົງຜູ້ເປັນເຈົ້ານາຍຂອງຂ້າພະເຈົ້າ.
15ເພາະສະນັ້ນ ບັດນີ້, ເລື່ອງເຂົ້າສາລີ ແລະ ເຂົ້າບາເລ, ນ້ຳມັນ ແລະ ນ້ຳອະງຸ່ນ, ທີ່ເຈົ້ານາຍຂອງຂ້າພະເຈົ້າໄດ້ກ່າວເຖິງນັ້ນ,
ຂໍພະອົງໄດ້ສົ່ງໄປໃຫ້ພວກເຂົາຜູ້ຮັບໃຊ້ພະອົງສາ. 16ພວກເຮົາຈະຕັດໄມ້ເທົ່າທີ່ພະອົງຕ້ອງການຈາກເລບານອນ, ຕາມຈຳນວນໄມ້ທີ່ຕ້ອງການ.
ພວກເຮົາຈະນຳມາໃຫ້ພະອົງໂດຍແພທາງທະເລເຖິງເມືອງຢົບປາ, ແລະ
ເພື່ອວ່າພະອົງຈະໄດ້ນຳຂຶ້ນໄປໃນເມືອງເຢຣູຊາເລັມ." 17ໂຊໂລໂມນຊົງເຮັດບັນຊີສຳມະໂນຄົວຄົນຕ່າງດ້າວທັງຫມົດຜູ້ຢູ່ໃນແຜ່ນດິນອິສະຣາເອນ,
ພາຍຫລັງ ບັນຊີສຳມະໂນຄົວທີ່ດາວິດ, ພໍ່ຂອງພະອົງ, ໄດ້ຊົງເຮັດໄວ້. ປະກົດວ່າມີຈຳນວນ 153,600 ຄົນ.
18ພຣະອົງຊົງກຳນົດໃຫ້ເຈັດຫມື່ນຄົນເປັນຄົນຂົນເຄື່ອງ. ແລະ ໃຫ້ແປດຫມື່ນຄົນສະກັດຫີນຢູ່ເທິງພູເຂົາ, ແລະ
3,600ຄົນເປັນຜູ້ເບິ່ງແຍງໃຫ້ປະຊາຊົນເຮັດວຽກ.


generated on Tue Jun 17 19:01:42 2025

# 3

[1]ແລ້ວໂຊໂລໂມນຊົງເລີ່ມສ້າງພຣະວິຫານຂອງພຣະຢາເວທີ່ເມືອງເຢຣູຊາເລັມເທິງພູເຂົາໂມຣີຢາ,
ຊຶ່ງເປັນບ່ອນທີ່ພຣະຢາເວຊົງປະກົດແກ່ດາວິດພໍ່ຂອງພະອົງ. ບ່ອນທີ່ດາວິດຊົງກຳນົດໄວ້, ທີ່ເດີ່ນນວດເຂົ້າຂອງອາໂຣນາຄົນເຢບຸດ.
[2]ພະອົງຊົງເລີ່ມສ້າງໃນວັນທີສອງເດືອນທີສອງ, ຂອງປີທີສີ່ແຫ່ງຣາຊະການຂອງພະອົງ.
[3]ຕໍ່ໄປນີ້ເປັນຮາກຖານທີ່ໂຊໂລໂມນຊົງວາງເພື່ອສ້າງພຣະວິຫານຂອງພຣະເຈົ້າ. ນຳໃຊ້ຮູບແບບເກົ່າຕາມສອກ, ລວງຍາວຕາມສອກບູຮານ,
ຫົກສິບສອກ, ແລະ ກວ້າງຊາວສອກ.

[4]ລະບຽງດ້ານຫນ້າຂອງພຣະວິຫານນັ້ນຍາວຊາວສອກ, ເທົ່າກັບລວງກວ້າງຂອງພຣະວິຫານ. ລວງສູງຊາວສອກ ແລະ
ໂຊໂລໂມນຊົງໂອບດ້ານໃນດ້ວຍຄຳບໍຣິສຸດ.[5]ຫ້ອງໂຖງ ພະອົງຊົງໂອບດ້ວຍໄມ້ແປກ, ແລະ ພະອົງໄດ້ໂອບດ້ວຍຄຳສົດ, ແລະ
ພະອົງໄດ້ແກະສະຫລັກເຮັດຕົ້ນຕານ ແລະ ລູກໂສ້ປະດັບໄວ້ເທິງນັ້ນ.
[6]ພະອົງຊົງແຕ່ງພຣະວິຫານດ້ວຍການຝັງເພັດພອຍຕ່າງເພື່ອຄວາມສວຍງາມ; ຄຳນັ້ນເປັນຄຳເມືອງປາວາຢິມ.
[7]ພະອົງຈຶ່ງຊົງໂອບພຣະວິຫານນັ້ນດ້ວຍຄຳຄືຢູ່ຄານທາງເຂົ້າປະຕູ, ຝາ, ແລະ ປະຕູ; ພະອົງໄດ້ສະຫລັກຮູບເຄຣຸບໄວ້ເທິງຝາ.
[8]ພະອົງຊົງສ້າງບ່ອນບໍຣິສຸດທີ່ສຸດ. ຄວາມຍາວຂອງບ່ອນນັ້ນຕາມຄວາມກວ້າງຂອງພຣະວິຫານເປັນຊາວສອກ, ແລະ ກວ້າງຊາວສອກ.
ພຣະອົງຊົງໂອບດ້ວຍຄຳເນື້ອດີ, ຫນັກຫົກຮ້ອຍຕະລັນຕົນ.[9]ນ້ຳຫນັກຂອງຕະປູຫ້າສິບເຊເຂນຄຳ. ພະອົງຊົງໂອບຫ້ອງຊັ້ນເທິງດ້ວຍຄຳ.
[10]ໃນບ່ອນບໍຣິສຸດທີ່ສຸດນັ້ນ ພະອົງຊົງສ້າງເຄຣຸບໄວ້ສອງຮູບ; ຊ່າງໄດ້ໂອບເຄຣູບທັງສອງດ້ວຍຄຳ.
[11]ປີກຂອງເຄຣຸບທັງສອງນັ້ນກາງອອກຍາວລວມກັນຊາວສອກ; ປີກຂ້າງຫນຶ່ງຂອງເຄຣຸບຮູບຫນຶ່ງຍາວຫ້າສອກ, ຈຸຝາພຣະວິຫານ;
ອີກປີກຫນຶ່ງຍາວຫ້າສອກ, ຈຸປີກຂອງເຄຣຸບອີກຮູບຫນຶ່ງ.[12]ປີກອີກຂ້າງຫນຶ່ງຂອງເຄຣຸບຍາວຫ້າສອກ, ຈຸຝາພຣະວິຫານ;
ອີກປີກຫນຶ່ງກໍຍາວຫ້າສອກ, ຕິດຕໍ່ກັບປີກຂອງເຄຣຸບອີກຮູບຫນຶ່ງ.
[13]ປີກຂອງເຄຣຸບເຫລົ່ານີ້ກາງອອກຍາວລວມກັນຊາວສອກ. ເຄຣຸບທັງສອງນັ້ນຢືນດ້ວຍຕີນທັງສອງຂ້າງຂອງຕົນ,
ຫັນຫນ້າໄປທາງຫ້ອງໂຖງໃຫ່ຍ.[14]ພະອົງຊົງສ້າງຜ້າກັ້ງ ດ້ວຍຜ້າສີຟ້າ, ສີມ່ວງ, ແລະ ສີແດງເຂັ້ມ ແລະ ຜ້າປ່ານເນື້ອລະອຽດ, ແລະ
ປັກຮູບເຄຣຸບໄວ້ເທິງນັ້ນ.[15]ຂ້າງຫນ້າພຣະວິຫານ ພະອົງຊົງສ້າງເສົາສອງຕົ້ນ, ແຕ່ລະຕົ້ນສູງສາມສິບຫ້າສອກ,
ມີບົວລົ້ມສູງຫ້າສອກຢູ່ເທິງປາຍເສົາແຕ່ລະຕົ້ນ.[16]ພະອົງຊົງເຮັດລູກໂສ້ຄືໃນຫ້ອງຫລັງຕິດໄວ້ທີ່ປາຍເສົາ;
ຊົງເຮັດທັບທິມຫນຶ່ງຮ້ອຍຫນ່ວຍແຂວນໄວ້ທີ່ໂສ້.[17]ພະອົງຊົງຕັ້ງເສົາໄວ້ຫນ້າພຣະວິຫານ, ເບື້ອງຂວາຕົ້ນຫນຶ່ງ, ແລະ ອີກຕົ້ນຫນຶ່ງເບື້ອງຊ້າຍ;
ຕົ້ນເບື້ອງຂວານັ້ນ ພະອົງຊົງຕັ້ງຊື່ວ່າ ຢາກິນ, ແລະ ຕົ້ນເບື້ອງຊ້າຍວ່າ ໂບອາດ.

 generated on Tue Jun 17 19:01:42 2025

4 [1]ນອກຈາກນັ້ນ ພະອົງຊົງສ້າງແທ່ນບູຊາດ້ວຍທອງເຫລືອງ; ຍາວຊາວສອກ, ແລະ ກວ້າງຊາວສອກ. ລວງສູງສິບສອກ.
[2]ພະອົງຊົງສ້າງຂັນຫລໍ່, ເປັນຂັນມົນ ວັດແທກຈາກຂອບຫນຶ່ງໄປເຖິງອີກຂອບຫນຶ່ງໄດ້ສິບສອກ, ສູງຫ້າສອກ ແລະ
ວັດແທກໂດຍຮອບໄດ້ສາມສິບສອກ.[3]ພາຍໃຕ້ຂັນນີ້ມີຮູບງົວຢູ່ຮອບຂັນ, ໃນໄລຍະຫນຶ່ງສອກມີຮູບງົວສິບໂຕ,
ຢູ່ຮອບຂັນງົວເຫລົ່ານີ້ຫລໍ່ພ້ອມກັນກັບຫລໍ່ຂັນ.

[4]ຂັນນັ້ນວາງຢູ່ເທິງງົວສິບສອງໂຕ, ຫັນຫນ້າໄປທິດເຫນືອ, ສາມໂຕ ຫັນຫນ້າໄປທິດຕາເວັນຕົກ, ສາມໂຕ ຫັນຫນ້າໄປທິດໃຕ້, ແລະ
ສາມໂຕຫັນຫນ້າໄປທິດຕາເວັນອອກ. ຂັນນັ້ນວາງຢູ່ເທິງງົວນີ້, ແລະ ສ່ວນເບື້ອງຫລັງຂອງມັນທັງຫມົດຢູ່ຂ້າງໃນ.[5]ຂັນຫນາຫນຶ່ງຄືບ, ແລະ
ຂອບຂອງມັນເຮັດຄືຂອບຖ້ວຍຄືດອກບົວ. ບັນຈຸນ້ຳໄດ້ສາມພັນບັດ.[6]ພະອົງຊົງເຮັດຂັນສິບຫນ່ວຍວາງຢູ່ດ້ານຂວາຫ້າຫນ່ວຍ; ແລະ
ດ້ານຊ້າຍຫ້າຫນ່ວຍ, ເພື່ອໃຊ້ລ້າງສິ່ງຂອງໃນນັ້ນ; ເຂົາຈະລ້າງຂອງທີ່ໃຊ້ເປັນເຄື່ອງເຜົາບູຊາໃນນີ້. ຂັນນັ້ນ,
ແມ່ນສຳລັບໃຫ້ປະໂລຫິດລ້າງໃນນັ້ນ.
[7]ແລ້ວພະອົງຊົງສ້າງຄັນຕະກຽງຄຳສິບຄັນຕາມທີ່ກຳນົດກ່ຽວກັບຄັນຕະກຽງ; ະພະອົງຊົງຕັ້ງໄວ້ໃນພຣະວິຫານ, ຢູ່ດ້ານຂວາຫ້າອັນ, ແລະ
ດ້ານຊ້າຍຫ້າອັນ.[8]ພະອົງຊົງສ້າງໂຕະສິບຫນ່ວຍ ແລະ ຕັ້ງໄວ້ໃນພຣະວິຫານ, ຢູ່ດ້ານຂວາຫ້າຫນ່ວຍ, ແລະ ດ້ານຊ້າຍຫ້າຫນ່ວຍ.
ພະອົງຊົງເຮັດຖ້ວຍຄຳຫນຶ່ງຮ້ອຍຫນ່ວຍ.
[9]ນອກຈາກນັ້ນ, ພະອົງຊົງສ້າງລານແຫ່ງປະໂລຫິດ ແລະ ລານໃຫຍ່, ແລະ ປະຕູລານ; ພະອົງຊົງໂອບປະຕູນັ້ນດ້ວຍທອງເຫລືອງ.
[10]ພະອົງຊົງວາງຂັນໄວ້ທີ່ດ້ານຂວາພຣະວິຫານ, ທາງທິດຕາເວັນອອກຫັນໄປຫາທາງທິດໃຕ້.
[11]ຮູຣາມໄດ້ສ້າງຫມໍ້ດິນ, ຊວ້ານ, ແລະ ຖ້ວຍດັ່ງນັ້ນ. ດັ່ງນັ້ນຮູຣາມຈຶ່ງເຮັດວຽກໃຫ້ກະສັດໂຊໂລໂມນເລື່ອງພຣະວິຫານຂອງພຣະເຈົ້າສຳເລັດ:
[12]ຄື ເສົາສອງຕົ້ນ, ຄິ້ວ ແລະ ບົວລົ້ມທີ່ຢູ່ເທິງປາຍເສົາທັງສອງ, ແລະ ຕາຫນ່າງສອງຜືນຊຶ່ງປົກຄຸມຄິ້ວທັງສອງຂອງບົວລົ້ມທີ່ຢູ່ເທິງປາຍເສົາ.
[13]ພະອົງໄດ້ສ້າງທັບທິມສີ່ຮ້ອຍເມັດສຳລັບຕາຫນ່າງທັງສອງຜືນ: ຕາຫນ່າງຜືນຫນຶ່ງມີເມັດທັບທິມສອງແຖວ
ເພື່ອປົກຄຸມຄິ້ວທັງສອງຂອງບົວລົ້ມທີ່ຢູ່ເທິງປາຍເສົາ.
[14]ພວກເຂົາເຮັດແທ່ນບູຊາ ແລະ ເຮັດຂັນໄວ້ເທິງແທ່ນບູຊານັ້ນ.[15]ຂັນຫນ່ວຍຫນຶ່ງ ແລະ ງົວສິບສອງໂຕຮອງຢູ່ຂັນນັ້ນ,[16]ພ້ອມທັງຫມໍ້ດິນ, ຊວ້ານ,
ແລະ ຂໍເກາະຊີ້ນ ແລະ ເຄື່ອງປະກອບທັງຫມົດນີ້. ຮູຣາມທີ່ປຶກສາອາວຸໂສໄດ້ເຮັດຂຶ້ນດ້ວຍທອງເຫລືອງສຸກຖວາຍກະສັດໂຊໂລໂມນ,
ສຳລັບພຣະວິຫານຂອງພຣະຢາເວ.
[17]ກະສັດຊົງຫລໍ່ສິ່ງເຫລົ່ານີ້ໃນທົ່ງຮາບພຽງແມ່ນ້ຳຢໍແດນ, ໃນບ່ອນດິນຫນຽວຢູ່ລະຫວ່າງສຸກໂກດກັບ ແລະ ເຊເຣດາ.
[18]ໂຊໂລໂມນຊົງສ້າງເຄື່ອງໃຊ້ທັງຫມົດນີ້ເປັນຈຳນວນຫລາຍ; ຈຶ່ງບໍ່ໄດ້ຫານ້ຳຫນັກຂອງທອງເຫລືອງ.
[19]ໂຊໂລໂມນຈຶ່ງຊົງເຮັດເຄື່ອງໃຊ້ທັງຫມົດທີ່ຢູ່ໃນພຣະວິຫານຂອງພຣະເຈົ້າຄື ແທ່ນບູຊາຄຳ, ແລະ ໂຕະເຂົ້າຈີ່ຕໍ່ຫນ້າພຣະພັກ;[20]ຄັນຕະກຽງ
ກັບຕະກຽງເຮັດດ້ວຍຄຳບໍຣິສຸດ, ເພື່ອໃຊ້ຕາມຕະກຽງຫນ້າຫ້ອງ—ສິ່ງຂອງເຫລົ່ານີ້ແມ່ນເຮັດດ້ວຍທອງຄຳບໍຣິສຸດ;[21]ແລະ ດອກໄມ້, ຕະກຽງ
ແລະ ມີດຕັດ ຕັດໃສ້ຕະກຽງ ເຮັດດ້ວຍຄຳ ຄືຄຳບໍຣິສຸດທີ່ສຸດ.[22]ມີດຕັດ ຕັດໄສ້ຕະກຽງ, ຖ້ວຍ, ຊ້ອນ, ແລະ ກະຖັ່ງໄຟ ເຮັດດ້ວຍຄຳບໍຣິສຸດ.
ສ່ວນທາງເຂົ້າຂອງພຣະວິຫານຄື ປະຕູ, ຊັ້ນໃນຂອງບ່ອນບໍຣິສຸດທີ່ສຸດ, ແລະ ປະຕູພຣະວິຫານຄືປະຕູຫ້ອງໂຖງ, ເຮັດດ້ວຍຄຳ.

 generated on Tue Jun 17 19:01:42 2025

5 1ບັນດາກິຈະການທີ່ໂຊໂລໂມນຊົງກະທຳສຳລັບພຣະວິຫານຂອງພຣະຢາເວກໍສຳເລັດດັ່ງນີ້, ໂຊໂລໂມນຊົງນຳບັນດາສິ່ງທີ່ດາວິດ, ຜູ້ເປັນບິດາ,
ຊົງຖວາຍໄວ້ເຂົ້າມາຄື ເຄື່ອງເງິນ, ເຄື່ອງຄຳ, ແລະ ເຄື່ອງໃຊ້ຕ່າງໆ—ພະອົງໄດ້ເກັບໄວ້ໃນຄັງພຣະວິຫານຂອງພຣະເຈົ້າ.

2ແລ້ວໂຊໂລໂມນຊົງປະຊຸມພວກຜູ້ໃຫຍ່ຂອງອິສະຣາເອນ, ບັນດາຫົວຫນ້າຂອງຕະກູນ, ແລະ
ບັນດາຫົວຫນ້າຂອງບັນພະບຸຣຸດຄົນອິສະຣາເອນ, ໃນເມືອງເຢຣູຊາເລັມ,
ເພື່ອຈະນຳຫີບຄຳຫມັ້ນສັນຍາຂອງພຣະຢາເວຂຶ້ນມາຈາກນະຄອນດາວິດຄືເມືອງຊີໂອນ.
3ຜູ້ຊາຍທັງຫມົດຂອງອິສະຣາເອນກໍປະຊຸມຕໍ່ພຣະພັກກະສັດ, ໃນການກິນລ້ຽງໃນເດືອນທີເຈັດ.
4ພວກຜູ້ໃຫຍ່ທັງຫມົດຂອງອິສະຣາເອນກໍມາ, ແລະ ຄົນເລວີ ກໍຍົກຫີບ. 5ພວກເຂົາທັງຫລາຍກໍນຳຫີບ, ຫໍເຕັນແຫ່ງຊຸມນຸມ, ແລະ
ເຄື່ອງໃຊ້ບໍຣິສຸດທັງຫມົດທີ່ຢູ່ໃນຫໍເຕັນຂຶ້ນມາ. ເຄື່ອງເຫລົ່ານີ້ບັນດາປະໂລຫິດຄົນເລວີຫາມຂຶ້ນມາ. 6ກະສັດໂຊໂລໂມນ ແລະ
ຊຸມນຸມຊົນອິສະຣາເອນທັງຫມົດທີ່ໄດ້ປະຊຸມກັນຢູ່ກັບພະອົງຕໍ່ຫນ້າຫີບ, ໄດ້ຖວາຍແກະ ແລະ ງົວຫລາຍໂຕ
ຊຶ່ງພວກເຂົາຈະນັບເອົາຈຳນວນກໍບໍ່ໄດ້.
7ປະໂລຫິດກໍນຳຫີບຄຳຫມັ້ນສັນຍາຂອງພຣະຢາເວມາເຖິງບ່ອນຂອງຫີບ, ຢູ່ໃນຫ້ອງຫລັງຂອງພຣະວິຫານ, ຄືໃນບ່ອນບໍຣິສຸດທີ່ສຸດ
ພາຍໃຕ້ປີກເຄຣຸບ. 8ເພາະວ່າເຄຣຸບນັ້ນກາງປີກອອກຢູ່ເທິງຫລັງຂອງຫີບ, ແລະ ເຄຣຸບຈຶ່ງເປັນເຄື່ອງປົກຄຸມເຫນືອຫີບ ແລະ ໄມ້ຄານຂອງຫີບ.
9ພວກເຂົາດຶງໄມ້ຄານຫາມຂອງຫີບນັ້ນອອກນຳ ຈຶ່ງເຫັນປາຍໄມ້ຄານຫາມໄດ້ຈາກຫີບນັ້ນ ຊຶ່ງຢູ່ຕໍ່ຫນ້າຫ້ອງຫລັງ,
ແຕ່ພວກເຂົາຈະເຫັນຈາກຂ້າງນອກບໍ່ໄດ້. ໄມ້ຄານຫາມກໍຍັງຢູ່ບ່ອນນັ້ນຈົນທຸກມື້ນີ້.
10ບໍ່ມີສິ່ງໃດໃນຫີບນອກຈາກສີລາສອງແຜ່ນທີ່ໂມເຊເກັບໄວ້ໃນພູເຂົາໂຮເຣັບ, ຕອນທີ່ພຣະຢາເວຊົງເຮັດຄຳຫມັ້ນສັນຍາກັບຄົນອິສະຣາເອນ,
ເມື່ອພວກເຂົາທັງຫລາຍອອກມາຈາກເອຢິບ.
11ແລະຢູ່ມາ ເມື່ອປະໂລຫິດອອກມາຈາກບ່ອນບໍຣິສຸດ. ບັນດາປະໂລຫິດທັງປວງຜູ້ຢູ່ບ່ອນນັ້ນໄດ້ຊຳຣະຕົນໃຫ້ບໍຣິສຸດຕໍ່ພຣະຢາເວ, ແລະ
ບໍ່ວ່າຈະຢູ່ໃນຫມວດໃດກໍຕາມ. 12ບັນດາພວກເລວີທີ່ເປັນນັກຮ້ອງທັງຫມົດ, ທັງອາສັບ, ເຮມານ, ເຢດູທູນແລະ ທັງລູກຊາຍ ແລະ
ພີ່ນ້ອງຂອງພວກເຂົາທັງຫລາຍ, ແຕ່ງກາຍດ້ວຍຜ້າປ່ານສີຂາວ, ມີແຊ່ງ, ພິນໃຫຍ່, ແລະ ພິນຄູ່ຢືນຢູ່ທາງຕາເວັນອອກຂອງແທ່ນບູຊາ.
ພ້ອມກັບປະໂລຫິດເປົ່າແກ120 ຄົນ. 13ຢູ່ມາພວກຄົນເປົ່າແກ ແລະພວກນັກຮ້ອງຈະເຮັດໃຫ້ຄົນໄດ້ຍິນພວກເຂົາທັງຫລາຍຮ້ອງເພງສັນຣະເສີນ
ແລະ ເພງໂມທະນາພຣະຄຸນພຣະຢາເວ. ເປັນສຽງດຽວກັນ ແລະ ເມື່ອພວກເຂົາຮ້ອງຂຶ້ນພ້ອມກັບແກ ແລະ ແຊ່ງ ກັບເຄື່ອງດົນຕີຊະນິດອື່ນ
ໃນການຖວາຍສັນຣະເສີນແກ່ພຣະຢາເວວ່າ. “ເພາະພຣະອົງປະເສີດ ເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດ.”
ພຣະວິຫານຄືພຣະວິຫານຂອງພຣະຢາເວ, ກໍມີເມກເຕັມໄປຫມົດ. 14ຈົນປະໂລຫິດຢືນບົວລະບັດບໍ່ໄດ້ດ້ວຍເຫດເມກນັ້ນ
ເພາະສະຫງ່າຣາສີຂອງພຣະຢາເວເຕັມພຣະວິຫານຂອງພຣະເຈົ້າ.

 generated on Tue Jun 17 19:01:42 2025

6 1ແລ້ວໂຊໂລໂມນກ່າວວ່າ, “ພຣະຢາເວໄດ້ກ່າວວ່າ ພຣະອົງຈະປຣະທັບໃນຄວາມມືດມິດ,2ແຕ່ຂ້າພະອົງໄດ້ສ້າງພຣະວິຫານທີ່ສູງສົ່ງ,
ອັນເປັນທີ່ປຣະທັບສຳລັບພຣະອົງເປັນສະຖານທີ່ເພື່ອພຣະອົງຈະຊົງສະຖິດຢູ່ເປັນນິດ.”3ແລ້ວກະສັດກໍຊົງຫັນພະພັກມາ ແລະ
ຊົງໃຫ້ພອນແກ່ຊຸມນຸມຊົນອິສະຣາເອນທັງປວງ, ຂະນະທີ່ຊຸມນຸມຊົນອິສະຣາເອນທັງປວງຢືນຢູ່.

4ພະອົງກ່າວວ່າ, “ສາທຸການແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ຜູ້ຊົງກະທຳໃຫ້ສຳເລັດ ດ້ວຍພຣະຫັດຂອງພຣະອົງ
ຕາມທີ່ພຣະອົງກ່າວໄວ້ດ້ວຍພຣະໂອດຕໍ່ດາວິດ ບິດາຂອງຂ້າພະເຈົ້າວ່າ,5‘ຕັ້ງແຕ່ມື້ທີ່ເຮົາໄດ້ນຳປະຊາຊົນຂອງເຮົາອອກຈາກແຜ່ນດິນເອຢິບ,
ເຮົາບໍ່ໄດ້ເລືອກເມືອງຫນຶ່ງເມືອງໃດໃນຕະກູນອິສະຣາເອນທັງຫມົດ ເພື່ອຈະສ້າງພຣະວິຫານ, ໃຫ້ນາມຊື່ຂອງເຮົາຈະຢູ່ບ່ອນນັ້ນ.
ເຮົາບໍ່ໄດ້ເລືອກຊາຍຄົນໃດໃຫ້ເປັນເຈົ້ານາຍເຫນືອອິສະຣາເອນປະຊາຊົນຂອງເຮົາ.6ແຕ່ເຖິງຢ່າງໃດກໍຕາມ, ເຮົາໄດ້ເລືອກເຢຣູຊາເລັມແລ້ວ,
ເພື່ອນາມຊື່ຂອງເຮົາຈະຢູ່ບ່ອນນັ້ນ, ແລະ ເຮົາໄດ້ເລືອກດາວິດແລ້ວ ໃຫ້ຢູ່ເຫນືອອິສະຣາເອນປະຊາຊົນຂອງເຮົາ.’
7ດາວິດ ບິດາຂອງຂ້າພະເຈົ້າຊົງຕັ້ງພະທັຍ, ທີ່ຈະສ້າງພຣະວິຫານສຳລັບພຣະນາມຊື່ແຫ່ງພຣະຢາເວ, ພຣະເຈົ້າຂອງອິສຣາເອນ.
8ແຕ່ພຣະຢາເວກ່າວກັບດາວິດ ບິດາຂອງຂ້າພະເຈົ້າວ່າ, ‘ທີ່ເຈົ້າຕັ້ງໃຈສ້າງພຣະວິຫານສຳລັບນາມຊື່ຂອງເຮົານັ້ນ, ເຈົ້າກໍເຮັດດີຢູ່ແລ້ວ
ໃນເລື່ອງຄວາມຕັ້ງໃຈຂອງເຈົ້າ.9ຢ່າງໃດກໍຕາມ, ເຈົ້າຈະບໍ່ສ້າງພຣະວິຫານ; ແຕ່ລູກຊາຍຂອງເຈົ້າ, ຜູ້ຊຶ່ງຈະອອກມາຈາກບັ້ນແອວຂອງເຈົ້າ,
ຈະສ້າງພຣະວິຫານເພື່ອນາມຊື່ຂອງເຮົາ.’
10ພຣະຢາເວຊົງໃຫ້ພຣະດຳຣັດຂອງພຣະອົງຊຶ່ງພຣະອົງຊົງກ່າວນັ້ນສຳເລັດ, ເພາະຂ້າພະເຈົ້າໄດ້ຂຶ້ນມາແທນດາວິດ ບິດາຂອງຂ້າພະເຈົ້າ, ແລະ
ນັ່ງຢູ່ເທິງບັນລັງຂອງອິສະຣາເອນ, ດັ່ງທີ່ພຣະຢາເວໄດ້ຊົງສັນຍາໄວ້.
ຂ້າພະເຈົ້າໄດ້ສ້າງພຣະວິຫານສຳລັບພຣະນາມຊື່ຂອງພຣະຢາເວພຣະເຈົ້າແຫ່ງອິສະຣາເອນ.11ຂ້າພະເຈົ້າໄດ້ວາງຫີບໄວ້ບ່ອນນັ້ນ,
ຄຳຫມັ້ນສັນຍາຂອງພຣະຢາເວກໍຢູ່ໃນນັ້ນ, ຊຶ່ງພຣະອົງໄດ້ຊົງໃຫ້ກັບຊົນຊາດອິສະຣາເອນ.”
12ໂຊໂລໂມນໄດ້ຊົງຢືນຢູ່ຕໍ່ຫນ້າແທ່ນບູຊາຂອງພຣະຢາເວ ຕໍ່ຫນ້າຊຸມນຸມຊົນອິສະຣາເອນທັງປວງ, ແລະ ກາງພະຫັດຂອງພະອົງອອກ.
13ເພາະໂຊໂລໂມນໄດ້ຊົງສ້າງແທ່ນທອງເຫລືອງ ຍາວຫ້າສອກ, ກວ້າງຫ້າສອກ, ແລະ ສູງສາມສອກ. ພະອົງໄດ້ຊົງຕັ້ງໄວ້ກາງເດີ່ນ.
ພະອົງຊົງປະທັບຢູ່ເທິງນັ້ນ ແລະ ຊົງຄຸເຂົ່າລົງຕໍ່ຫນ້າຊຸມນຸມອິສະຣາເອນທັງປວງ, ແລະ ກາງພະຫັດຂອງພະອົງສູ່ຟ້າສະຫວັນ.
14ພະອົງທູນວ່າ, “ຂ້າແດ່ພຣະຢາເວພຣະເຈົ້າແຫ່ງອິສະຣາເອນ, ບໍ່ມີພຣະເຈົ້າອົງໃດເຫມືອນພຣະອົງ ໃນຟ້າສະຫວັນ ຫລື ທີ່ແຜ່ນດິນໂລກ,
ຜູ້ຊົງຮັກສາຄຳຫມັ້ນສັນຍາ ແລະຊົງສຳແດງຄວາມເມດຕາແກ່ຜູ້ຮັບໃຊ້ຂອງພຣະອົງ ຜູ້ດຳເນີນຢູ່ຕໍ່ພຣະພັກພຣະອົງດ້ວຍສິ້ນສຸດໃຈຂອງເຂົາ;
15ພຣະອົງໄດ້ຊົງກະທຳກັບດາວິດບິດາຂອງຂ້າພະອົງ, ຜູ້ຮັບໃຊ້ຂອງພຣະອົງຕາມບັນດາສິ່ງ ທີ່ພຣະອົງຊົງສັນຍາໄວ້ ແກ່ເພິ່ນ.
ພຣະອົງກ່າວດ້ວຍພຣະໂອດຂອງພຣະອົງ ແລະ ພຣະອົງໄດ້ຊົງກະທຳໃຫ້ສຳເລັດ, ໃນມື້ນີ້ດ້ວຍພຣະຫັດຂອງພຣະອົງ.
16ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ບັດນີ້ຂໍຊົງດຳຣົງຢູ່ກັບຜູ້ຮັບໃຊ້ຂອງພຣະອົງ ຄື ດາວິດ ບິດາຂອງຂ້າພະອົງ,
ຕາມທີ່ພຣະອົງຊົງສັນຍາໄວ້ກັບເພິ່ນວ່າ, ‘ຖ້າລູກຫລານທັງຫລາຍຂອງເຈົ້າ ລະມັດຣະວັງ ໃນການດຳເນີນຊີວິດຂອງພວກເຂົາ
ໂດຍດຳເນີນຕາມພຣະບັນຍັດຂອງເຮົາ ຄືທີ່ເຈົ້າໄດ້ດຳເນີນຕໍ່ຫນ້າເຮົານັ້ນ
ເຈົ້າຈະບໍ່ຂາດຊາຍຜູ້ຫນຶ່ງໃນສາຍຕາຂອງເຮົາທີ່ຈະນັ່ງເທິງບັນລັງຂອງອິສະຣາເອນ.’17ສະນັ້ນ, ຂ້າແດ່ພຣະເຈົ້າແຫ່ງອິສະຣາເອນ,
ຂ້າພະເຈົ້າອະທິຖານ ຂໍໃຫ້ພຣະສັນຍາຂອງພຣະອົງຈົ່ງດຳຣົງຢູ່ ຊຶ່ງພຣະອົງໄດ້ສັນຍາກັບດາວິດ ຜູ້ຮັບໃຊ້ຂອງພຣະອົງຈະເປັນຈິງ.
18ແຕ່ແທ້ຈິງແລ້ວພຣະເຈົ້າຈະຊົງປຣະທັບກັບມະນຸດທີ່ແຜ່ນດິນໂລກຫລື? ເບິ່ງແມ, ຈັກກະວານ ແລະ
ຟ້າສະຫວັນອັນສູງທີ່ສຸດຍັງຮັບພຣະອົງຢູ່ບໍ່ໄດ້—ແລ້ວພຣະວິຫານທີ່ຂ້າພະອົງໄດ້ສ້າງຂຶ້ນຈະຮັບພຣະອົງໄດ້ຢ່າງໃດ!
19ແຕ່ຂໍພຣະອົງຊົງສົນພຣະທັຍໃນຄຳອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ ແລະ ໃນຄຳອ້ອນວອນນີ້, ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້າພະອົງ;
ຂໍຊົງຮັບຟັງສຽງຮ້ອງ ແລະ ຄຳອະທິຖານທີ່ຜູ້ຮັບໃຊ້ຂອງພຣະອົງອະທິຖານຕໍ່ພຣະພັກພຣະອົງ.
20ເພື່ອວ່າພຣະເນດຂອງພຣະອົງຈະຊົງຢູ່ເຫນືອພຣະວິຫານນີ້ທັງກາງເວັນ ແລະ ກາງຄືນ, ຄືສະຖານທີ່ຊຶ່ງພຣະອົງໄດ້ກ່າວວ່າ
ຈະຕັ້ງພຣະນາມຊື່ຂອງພຣະອົງໄວ້ບ່ອນນັ້ນ.
ເພື່ອວ່າພຣະອົງຈະຊົງຮັບຟັງຄຳອະທິຖານທີ່ຜູ້ຮັບໃຊ້ຂອງພຣະອົງໄດ້ອະທິຖານຢູ່ຕໍ່ຫນ້າສະຖານທີ່ນີ້.
21ດັ່ງນັ້ນ ຂໍພຣະອົງຊົງຮັບຟັງຄຳອ້ອນວອນຂອງຜູ້ຮັບໃຊ້ຂອງພຣະອົງ ແລະ ຂອງອິສະຣາເອນປະຊາຊົນຂອງພຣະອົງ
ເມື່ອພວກເຂົາອະທິຖານຢູ່ຕໍ່ຫນ້າສະຖານທີ່ນີ້. ຂໍພຣະອົງຊົງຮັບຟັງຢູ່ໃນຟ້າສະຫວັນອັນເປັນບ່ອນປຣະທັບຂອງພຣະອົງ; ແລະ
ເມື່ອພຣະອົງຊົງຮັບຟັງແລ້ວ, ກໍຂໍພຣະອົງຊົງໂຜດຍົກໂທດ.
22ເມື່ອຊາຍຄົນໃດເຮັດບາບຕໍ່ເພື່ອນບ້ານຂອງຕົນ ແລະ ຖືກບັງຄັບໃຫ້ສາບານ,
ແລ້ວລາວມາໃຫ້ຄຳສາບານຕໍ່ຫນ້າແທ່ນບູຊາຂອງພຣະອົງໃນພຣະວິຫານນີ້,23ຂໍພຣະອົງຊົງຮັບຟັງຈາກຟ້າສະຫວັນ ແລະ ຂໍຊົງກະທຳ ແລະ
ຂໍຊົງພິພາກສາຜູ້ຮັບໃຊ້ທັງຫລາຍຂອງພຣະອົງ, ລົງໂທດຜູ້ເຮັດຄວາມຜິດ, ຊົງນຳຄວາມປະພຶດຂອງພວກເຂົາໃຫ້ຕົກເທິງຫົວຂອງຕົວເຂົາເອງ.
ຂໍຊົງປະກາດຄວາມບໍຣິສຸດຂອງຜູ້ຊອບທັມ, ສະຫນອງແກ່ລາວຕາມຄວາມຊອບທັມຂອງລາວ.
24ຖ້າອິສະຣາເອນປະຊາຊົນຂອງພຣະອົງພ່າຍແພ້ຕໍ່ຫນ້າສັດຕຣູ ເພາະພວກເຂົາໄດ້ເຮັດບາບຕໍ່ພຣະອົງ,
ຖ້າພວກເຂົາຖອຍຫລັງກັບມາຫາພຣະອົງອີກ, ຍອມຮັບພຣະນາມຊື່ຂອງພຣະອົງ, ອະທິຖານ ແລະ ອ້ອນວອນຕໍ່ພຣະພັກ
ພຣະອົງໃນພຣະວິຫານນີ້—25ກໍຂໍພຣະອົງຊົງຮັບຟັງໃນຟ້າສະຫວັນ ແລະ
ໂຜດຍົກໂທດຄວາມຜິດບາບຂອງອິສະຣາເອນປະຊາຊົນຂອງພຣະອົງ; ຂໍຊົງນຳພວກເຂົາກັບມາຍັງແຜ່ນດິນ
ຊຶ່ງພຣະອົງໄດ້ໂຜດປຣະທານແກ່ພວກເຂົາທັງຫລາຍ ແລະ ບັນພະບຸຣຸດຂອງພວກເຂົາ.
26ເມື່ອຟ້າສະຫວັນປິດຢູ່ ແລະ ບໍ່ມີຝົນ ເພາະພວກເຂົາທັງຫລາຍໄດ້ເຮັດບາບຕໍ່ພຣະອົງ—ຖ້າພວກເຂົາໄດ້ອະທິຖານຕໍ່ສະຖານທີ່ນີ້,
ຍອມຮັບພຣະນາມຊື່ຂອງພຣະອົງ, ແລະ ຫັນຫລັງກັບຈາກບາບຂອງພວກເຂົາ ເມື່ອພຣະອົງຊົງເຮັດໃຫ້ພວກເຂົາໄດ້ຮັບຄວາມທຸກໃຈ—
27ກໍຂໍພຣະອົງຊົງຮັບຟັງໃນຟ້າສະຫວັນ ແລະຂໍໂຜດຍົກໂທດຄວາມຜິດບາບຂອງຜູ້ຮັບໃຊ້ຂອງພຣະອົງ
ແລະຂອງອິສະຣາເອນປະຊາຊົນຂອງພຣະອົງ, ເມື່ອພຣະອົງຊົງສອນທາງດີແກ່ພວກເຂົາ ຊຶ່ງພວກເຂົາຄວນຈະດຳເນີນໄປ.
ຂໍຊົງປຣະທານຝົນເທິງແຜ່ນດິນຂອງພຣະອົງ, ຊຶ່ງພຣະອົງໄດ້ພຣະຣາຊະທານແກ່ປະຊາຊົນຂອງພຣະອົງເປັນມໍຣະດົກນັ້ນ.

[28]ຖ້າມີການອຶດຢາກອາຫານໃນແຜ່ນດິນ, ຫລື ຖ້າມີພະຍາດລະບາດ, ພືດຫ່ຽວແຫ້ງ ຫລື ເຊື້ອຣາທຳລາຍ, ຫລື ຕັກແຕນບິນ ຫລື
ຕັກແຕນຄານ; ຫລື ສັດຕຣູຂອງພວກເຂົາອ້ອມເມືອງໃນແຜ່ນດິນຂອງພວກເຂົາໄວ້ທຸກດ້ານຈະເປັນພັຍພິບັດຢ່າງໃດ, ຫລື
ຄວາມເຈັບຢ່າງໃດມີຂຶ້ນກໍດີ—[29]ແລະ ບໍ່ວ່າຄຳອະທິຖານຢ່າງໃດ ຫລື ຄຳອ້ອນວອນປະການໃດ ຊຶ່ງປະຊາຊົນຄົນໃດ ຫລືອິສະຣາເອນ—
ປະຊາຊົນຂອງພຣະອົງທັງຫມົດທູນເພາະພັຍພິບັດ ແລະ ຄວາມທຸກໃຈ ແລ້ວໄດ້ກາງມືຂອງພວກເຂົາສູ່ພຣະວິຫານນີ້.
[30]ຂໍພຣະອົງຊົງຮັບຟັງໃນຟ້າສະຫວັນ, ອັນເປັນບ່ອນປຣະທັບຂອງພຣະອົງ; ພຣະຣາຊະທານອະພັຍໂທດບາບ, ແລະ
ຊົງປຣະທານແກ່ທຸກຄົນທີ່ພຣະອົງຊົງຮູ້ຈິດໃຈຕາມການປະພຶດທັງຫມົດຂອງພວກເຂົາ; ພຣະອົງຊົງຮູ້ຈັກຈິດໃຈຂອງເຂົາ,
ເພາະພຣະອົງເທົ່ານັ້ນທີ່ຊົງຮູ້ຈິດໃຈລູກທັງຫລາຍຂອງມະນຸດ.[31]ຈົ່ງກະທຳຢ່າງນີ້ ເພື່ອວ່າພວກເຂົາຈະໄດ້ຢຳເກງພຣະອົງ,
ແລະພວກເຂົາຈະດຳເນີນໃນເສັ້ນທາງຂອງພຣະອົງ ຕະຫລອດວັນເວລາທີ່ພວກເຂົາມີຊີວິດຢູ່ໃນແຜ່ນດິນ
ຊຶ່ງພຣະອົງໄດ້ພຣະຣາຊະທານແກ່ບັນພະບຸຣຸດຂອງຂ້າພະອົງທັງຫລາຍ.
[32]ຫລາຍກວ່ານັ້ນອີກ ກ່ຽວກັບຄົນຕ່າງດ້າວ ຜູ້ທີ່ບໍ່ແມ່ນອິສະຣາເອນ, ແຕ່ປະຊາຊົນຂອງພຣະອົງ ເມື່ອພວກເຂົາມາຈາກ ປະເທດເມືອງໄກ—
ເພາະເຫັນແກ່ພຣະນາມຊື່ອັນຍິ່ງໃຫຍ່ຂອງພຣະອົງ, ພຣະຫັດຊົງຣິດຂອງພຣະອົງ, ແລະ ພຣະກອນທີ່ຢຽດອອກຂອງພຣະອົງ—
ເມື່ອພວກເຂົາມາ ແລະ ອະທິຖານຢູ່ຕໍ່ຫນ້າພຣະວິຫານນີ້,[33]ກໍຂໍພຣະອົງຊົງຮັບຟັງໃນຟ້າສະຫວັນ, ອັນເປັນບ່ອນປຣະທັບຂອງພຣະອົງ,
ແລະຂໍຊົງກະທຳຕາມທຸກສິ່ງທີ່ຄົນຕ່າງດ້າວໄດ້ທູນຂໍຕໍ່ພຣະອົງ, ເພື່ອວ່າຊົນຊາດທັງຫລາຍແຫ່ງແຜ່ນດິນໂລກຈະຮູ້ຈັກພຣະນາມຊື່ຂອງພຣະອົງ,
ແລະ ຢຳເກງພຣະອົງ, ດັ່ງອິສະຣາເອນປະຊາຊົນຂອງພຣະອົງຢຳເກງພຣະອົງຢູ່ນັ້ນ, ແລະ
ເພື່ອພວກເຂົາທັງຫລາຍຈະຮູ້ວ່າພຣະວິຫານທີ່ຂ້າພະອົງໄດ້ສ້າງໄວ້ນີ້ເປັນບ່ອນເອີ້ນອອກພຣະນາມຊື່ຂອງພຣະອົງ.
[34]ຖ້າປະຊາຊົນຂອງພຣະອົງອອກໄປເຮັດສົງຄາມຕໍ່ສູ້ສັດຕຣູຂອງພວກເຂົາ, ຈະເປັນໂດຍທາງໃດທີ່ພຣະອົງຊົງໃຊ້ພວກເຂົາອອກໄປກໍຕາມ, ແລະ
ພວກເຂົາໄດ້ອະທິຖານຕໍ່ພຣະອົງຢູ່ຕໍ່ຫນ້າເມືອງນີ້ ຊຶ່ງພຣະອົງຊົງເລືອກໄວ້, ແລະ
ຕໍ່ຫນ້າພຣະວິຫານທີ່ຂ້າພະອົງໄດ້ສ້າງເພື່ອພຣະນາມຊື່ຂອງພຣະອົງແລ້ວ.[35]ຂໍພຣະອົງຊົງຮັບຟັງຄຳອະທິຖານ ແລະ
ຄຳອ້ອນວອນຂອງພວກເຂົາໃນຟ້າສະຫວັນ, ແລະ ຂໍຊົງໃຫ້ສິດທິອັນຊອບທັມຂອງພວກເຂົາຄົງຢູ່.
[36]ຖ້າພວກເຂົາເຮັດບາບຕໍ່ພຣະອົງ—ເພາະບໍ່ມີມະນຸດຈັກຄົນຫນຶ່ງຊຶ່ງບໍ່ໄດ້ເຮັດບາບ—ແລະ ພຣະອົງຊົງຄຽດຮ້າຍຕໍ່ພວກເຂົາ ແລະ
ພຣະອົງຊົງມອບພວກເຂົາໄວ້ຕໍ່ສັດຕຣູພວກເຂົາ, ຈຶ່ງຖືກຈັບໄປເປັນຊະເລີຍໃນແຜ່ນດິນໃດຫນຶ່ງບໍ່ວ່າໄກ ຫລື ໃກ້.
[37]ແຕ່ຖ້າພວກເຂົາສຳນຶກຜິດໃນໃຈໃນແຜ່ນດິນທີ່ເຂົາໄດ້ຖືກຈັບໄປເປັນຊະເລີຍນັ້ນ, ແລະ ພວກເຂົາໄດ້ກັບໃຈ ແລະ
ສະແຫວງຫາຄວາມຊອບທັມຈາກພຣະອົງໃນແຜ່ນດິນຂອງເຂົາໄປເປັນຊະເລີຍ. ຖ້າເຂົາທູນຕໍ່ພຣະອົງວ່າ, ‘ຂ້າພະອົງທັງຫລາຍໄດ້ເຮັດບາບ
ແລະ ໄດ້ປະພຶດຊົ່ວຮ້າຍ
ໄດ້ເຮັດຄວາມຊົ່ວ.’[38]ຖ້າພວກເຂົາທັງຫລາຍກັບມາຫາພຣະອົງດ້ວຍສຸດຈິດສຸດໃຈຂອງພວກເຂົາໃນບ່ອນທີ່ສັດຕຣູກວາດໄປເປັນຊະເລີຍນັ້ນ,
ແລະໄດ້ອະທິຖານຕໍ່ພຣະອົງຢູ່ຕໍ່ຫນ້າແຜ່ນດິນຂອງພວກເຂົາ, ຊຶ່ງພຣະອົງພຣະຣາຊະທານແກ່ບັນພະບຸຣຸດຂອງພວກເຂົາ,ແລະ
ຕໍ່ເມືອງທີ່ພຣະອົງໄດ້ຊົງເລືອກໄວ້, ແລະ ຕໍ່ພຣະວິຫານທີ່ຂ້າພະອົງໄດ້ສ້າງໄວ້ເພື່ອພຣະນາມຊື່ຂອງພຣະອົງ.
[39]ແລ້ວຂໍພຣະອົງຊົງຮັບຟັງຄຳອະທິຖານ ແລະ ຄຳອ້ອນວອນຂອງພວກເຂົາໃນຟ້າສະຫວັນອັນເປັນບ່ອນປະທັບຂອງພຣະອົງ, ແລະ
ຂໍຊົງໃຫ້ສິດທິອັນຊອບທັມຂອງພວກເຂົາຄົງຢູ່. ຂໍຊົງໂຜດຍົກໂທດໃຫ້ແກ່ປະຊາຊົນຂອງພຣະອົງຜູ້ໄດ້ເຮັດບາບຕໍ່ພຣະອົງ.[40]ບັດນີ້,
ຂ້າແດ່ພຣະເຈົ້າຂອງຂ້າພະອົງ, ຂໍພຣະເນດຂອງພຣະອົງຊົງເບິ່ງຢູ່, ແລະ ຂໍພຣະກັນຂອງພຣະອົງ ຊົງຮັບຟັງຄຳອະທິຖານແຫ່ງສະຖານທີ່ນີ້.
[41]ຂ້າແດ່ພຣະຢາເວ, ບັດນີ້ ຂໍຊົງລຸກຂຶ້ນ, ສະເດັດໄປໃນທີ່ປຣະທັບຂອງພຣະອົງ, ທັງພຣະອົງ ແລະ ຫີບແຫ່ງຣິດທານຸພາບຂອງພຣະອົງ.
ຂ້າແດ່ພຣະຢາເວພຣະເຈົ້າ. ຂໍໃຫ້ປະໂລຫິດຂອງພຣະອົງສວມຄວາມພົ້ນ, ແລະ
ໃຫ້ຜູ້ບໍຣິສຸດຂອງພຣະອົງຊົມຊື່ນຍິນດີໃນຄວາມປະເສີດຂອງພຣະອົງ.[42]ຂ້າແດ່ພຣະຢາເວພຣະເຈົ້າ,
ຂໍຢ່າຊົງຫັນຫນ້າຫນີຈາກຜູ້ທີ່ພຣະອົງຊົງເຈີມໄວ້ນັ້ນ. ຂໍພຣະອົງຊົງລະນຶກເຖິງຄວາມເມດຕາຂອງພຣະອົງທີ່ມີຕໍ່ດາວິດ, ຜູ້ຮັບໃຊ້ຂອງພຣະອົງ.”


generated on Tue Jun 17 19:01:42 2025

# 7

[1]ເມື່ອໂຊໂລໂມນຈົບຄຳອະທິຖານຂອງພຣະອົງແລ້ວ, ໄຟໄດ້ລົງມາຈາກຟ້າສະຫວັນໄຫມ້ເຄື່ອງເຜົາບູຊາ ແລະ ເຄື່ອງສັດບູຊາ, ແລະ
ສະຫງ່າຣາສີຂອງພຣະຢາເວກໍເຕັມພຣະວິຫານ.[2]ປະໂລຫິດເຂົ້າໄປໃນພຣະວິຫານຂອງພຣະຢາເວບໍ່ໄດ້,
ເພາະວ່າພຣະຣັສມີຂອງພຣະຜູ້ເປັນເຈົ້າເຕັມພຣະວິຫານຂອງພຣະຜູ້ເປັນເຈົ້າ.[3]ເມື່ອບັນດາຊົນອິສະຣາເອນໄດ້ເຫັນໄຟລົງມາ ແລະ
ພຣະຣັສມີຂອງພຣະຢາເວຢູ່ເທິງພຣະວິຫານ. ພວກເຂົາທັງຫລາຍກໍກົ້ມຂາບລົງເຖິງພື້ນຫີນ, ໄດ້ນະມັສະການ,ແລະ
ສັນຣະເສີນຂອບພຣະຄຸນພຣະຢາເວ, “ເພາະພຣະອົງປະເສີດ, ເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດ.”

[4]ແລ້ວກະສັດ ແລະ ບັນດາປະຊາຊົນທັງຫລາຍໄດ້ຖວາຍເຄື່ອງສັດບູຊາຕໍ່ພຣະພັກພຣະຢາເວ.
[5]ກະສັດໂຊໂລໂມນຊົງຖວາຍເຄື່ອງສັດບູຊາເປັນງົວສອງຫມື່ນສອງພັນໂຕ ແລະ ແກະ120,000 ໂຕ ແລະ ແບ້ທັງຫລາຍ. ດັ່ງນີ້ແຫລະ ກະສັດ
ແລະ ປະຊາຊົນທັງປວງໄດ້ອຸທິດຖວາຍພຣະວິຫານແຫ່ງພຣະເຈົ້າ.[6]ບັນດາປະໂລຫິດ, ກໍຢືນປະຈຳຕຳແຫນ່ງຂອງຕົນ;
ທັງຄົນເລວີພ້ອມກັບເຄື່ອງດົນຕຣີຖວາຍແດ່ພຣະຢາເວ, ຊຶ່ງກະສັດດາວິດໄດ້ຊົງກະທຳເພື່ອສັນຣະເສີນຂອບພຣະຄຸນພຣະຢາເວໃນເພງນັ້ນ,
"ເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດ." ປະໂລຫິດກໍເປົ່າແກຂ້າງຫນ້າພວກເຂົາ, ແລະ ອິສະຣາເອນທັງປວງກໍຢືນຢູ່.
[7]ໂຊໂລໂມນຊົງແຍກສ່ວນກາງຂອງເດີ່ນຊຶ່ງຢູ່ຂ້າງຫນ້າພຣະວິຫານຂອງພຣະຢາເວ. ທີ່ນັ້ນພຣະອົງຊົງຖວາຍເຄື່ອງເຜົາບູຊາ ແລະ
ໄຂມັນຂອງເຄື່ອງບູຊາ, ເພາະວ່າແທ່ນທອງເຫລືອງທີ່ໂຊໂລໂມນຊົງສ້າງໄວ້ນັ້ນ ບໍ່ພໍບັນຈຸເຄື່ອງເຜົາບູຊາ, ເຄື່ອງບູຊາພືດຜົນເປັນເມັດ, ແລະ
ໄຂມັນ.
[8]ໃນເທື່ອນັ້ນ ໂຊໂລໂມນຊົງຖືເທສະການຢູ່ເຈັດມື້, ແລະ ອິສະຣາເອນທັງປວງຢູ່ກັບພະອົງດ້ວຍ, ເປັນຊຸມນຸມຊົນໃຫຍ່ຫລາຍ,
ຕັ້ງແຕ່ທາງເຂົ້າເມືອງຮາມັດຈົນຮອດແມ່ນ້ຳເອຢິບ.[9]ແລະໃນມື້ທີແປດ ພວກເຂົາທັງຫລາຍມີການປະຊຸມອັນສັກສິດ,
ເພາະໄດ້ມີງານມອບຖວາຍແທ່ນບູຊາເຈັດມື້, ແລະ ຖືເທສະການກິນລ້ຽງມາເຈັດມື້ແລ້ວ.[10]ເມື່ອວັນທີຊາວສາມຂອງເດືອນທີເຈັດ,
ໂຊໂລໂມນຊົງໃຫ້ປະຊາຊົນກັບໄປເຕັນຂອງຕົນ ດ້ວຍຄວາມຍິນດີ ແລະ ຈິດໃຈຊື່ນບານເພາະຄວາມດີທີ່ພຣະຢາເວໄດ້ຊົງສຳແດງແກ່ດາວິດ,
ແກ່ໂຊໂລໂມນ, ແລະ ແກ່ອິສະຣາເອນ, ປະຊາຊົນຂອງພຣະອົງ.
[11]ດັ່ງນີ້ແຫລະ ໂຊໂລໂມນຊົງສ້າງພຣະວິຫານຂອງພຣະຢາເວ ແລະ ພະຣາຊະວັງສຳເລັດ. ຄືທຸກຢ່າງ
ທີ່ພະອົງຊົງກ່າວໃນເລື່ອງພຣະວິຫານຂອງພຣະຢາເວ ແລະ ໃນເລື່ອງພະຣາຊະສຳນັກຂອງພະອົງ, ພະອົງກໍຊົງກະທຳໃຫ້ສຳເລັດຫມົດ.
[12]ແລ້ວພຣະຢາເວຊົງປະກົດແກ່ໂຊໂລໂມນໃນເວລາກາງຄືນ ແລະ ກ່າວກັບພະອົງວ່າ, “ເຮົາໄດ້ຍິນຄຳອະທິຖານຂອງເຈົ້າ, ແລະ
ໄດ້ເລືອກສະຖານທີ່ນີ້ສຳລັບເຮົາໃຫ້ເປັນວິຫານແຫ່ງເຄື່ອງສັດບູຊາ.
[13]ຖ້າເຮົາປິດຟ້າສະຫວັນບໍ່ໃຫ້ຝົນຕົກ, ຫລື ເຮົາບັນຊາໃຫ້ຕັກແຕນມາກິນແຜ່ນດິນ, ຫລື
ສົ່ງພະຍາດຣະບາດມາໃນທ່າມກາງປະຊາຊົນຂອງເຮົາ,[14]ຖ້າປະຊາຊົນຂອງເຮົາ, ຜູ້ທີ່ເອີ້ນອອກນາມຊື່ຂອງເຮົານັ້ນ, ຈະຖ່ອມຕົວລົງ, ອະທິຖານ,
ແລ້ວສະແຫວງຫາເຮົາ, ແລະ ຫລີກຫນີຈາກທາງຊົ່ວຂອງຕົນ, ເຮົາກໍຈະຟັງຈາກສະຫວັນ, ຈະໃຫ້ອະພັຍແກ່ບາບຂອງຄົນນັ້ນ, ແລະ
ຈະຮັກສາແຜ່ນດິນຂອງລາວໃຫ້ຫາຍ.[15]ບັດນີ້ ຕາຂອງເຮົາຈະມືນຢູ່ ແລະ
ຫູຂອງເຮົາຈະຟັງຄຳອະທິຖານທີ່ເຂົາທັງຫລາຍອະທິຖານໃນສະຖານທີ່ນີ້.
[16]ເພາະບັດນີ້ ເຮົາໄດ້ເລືອກ ແລະ ເຮັດໃຫ້ວິຫານນີ້ເປັນບ່ອນບໍຣິສຸດ ເພື່ອນາມຊື່ຂອງເຮົາຈະຢູ່ບ່ອນນັ້ນເປັນນິດ. ຕາຂອງເຮົາ ແລະ
ໃຈຂອງເຮົາຈະຢູ່ບ່ອນນັ້ນຕະຫລອດເວລາ.[17]ສ່ວນເຈົ້າ, ຖ້າເຈົ້າດຳເນີນຊີວິດຕໍ່ຫນ້າເຮົາຄືດາວິດບິດາຂອງເຈົ້າດຳເນີນນັ້ນ,
ໂດຍເຮັດຕາມທຸກສິ່ງທີ່ເຮົາໄດ້ບັນຊາແກ່ເຈົ້າ ແລະ ຮັກສາກົດເກນຂອງເຮົາກັບຄຳຕັດສິນຂອງເຮົາ.
[18]ແລ້ວເຮົາຈະສະຖາປະນາຣາຊະບັນລັງແຫ່ງອານາຈັກຂອງເຈົ້າ, ດັ່ງທີ່ເຮົາໄດ້ເຮັດຄຳຫມັ້ນສັນຍາໄວ້ກັບດາວິດບິດາຂອງເຈົ້າວ່າ,
ເມື່ອເຮົາໄດ້ກ່າວວ່າ, ‘ເຊື້ອສາຍຄົນຫນຶ່ງຂອງເຈົ້າຈະບໍ່ຂາດຊາຍຜູ້ທີ່ຈະປົກຄອງເຫນືອອິສະຣາເອນ.’
[19]ແຕ່ຖ້າເຈົ້າຫັນໄປ, ແລະ ປະຖິ້ມກົດເກນຂອງເຮົາ ແລະກັບບັນຍັດຂອງເຮົາທີ່ເຮົາຕັ້ງໄວ້ຕໍ່ຫນ້າເຈົ້າ, ແລ້ວໄປບົວລະບັດພະອື່ນ ແລະ
ນະມັສະການພະເຫລົ່ານັ້ນ,[20]ເຮົາຈະຖອນຮາກພວກເຂົາທັງຫລາຍຈາກແຜ່ນດິນຂອງເຮົາ ຊຶ່ງເຮົາໄດ້ໃຫ້ແກ່ພວກເຂົາ.
ວິຫານຊຶ່ງເຮົາຊຳຣະໃຫ້ບໍຣິສຸດເພື່ອນາມຊື່ຂອງເຮົາ, ເຮົາຈະໂຍນອອກໄປຈາກສາຍຕາຂອງເຮົາ, ແລະ ເຮົາຈະເຮັດໃຫ້ເປັນເລື່ອງເວົ້າ ແລະ
ເປັນທີ່ຫມິ່ນປະຫມາດທ່າມກາງຊົນຊາດທັງຫລາຍ.[21]ເຖິງແມ່ນວ່າວິຫານທີ່ສູງສົ່ງນີ້, ທຸກຄົນທີ່ຜ່ານໄປຈະປະຫລາດໃຈ. ພວກເຂົາຈະກ່າວວ່າ,
‘ເຫດໃດພຣະຢາເວຈຶ່ງຊົງກະທຳເຊັ່ນນີ້ແກ່ແຜ່ນດິນນີ້ ແລະ ແກ່ພຣະວິຫານນີ້?’[22]ແລ້ວເຂົາທັງຫລາຍຈະຕອບວ່າ,
‘ເພາະພວກເຂົາປະຖິ້ມພຣະຢາເວ ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ, ຜູ້ຊົງນຳພວກເຂົາອອກຈາກແຜ່ນດິນເອຢິບ, ແລະ ໄດ້ນັບຖືພະອື່ນ ແລະ
ນະມັສະການພະເຫລົ່ານັ້ນ ທັງບົວລະບັດດ້ວຍ. ສະນັ້ນ ພຣະຢາເວຈຶ່ງໄດ້ຊົງນຳເຫດຮ້າຍທັງຫມົດນີ້ມາເຖິງພວກເຂົາ.’”


generated on Tue Jun 17 19:01:42 2025

8 [1]ຢູ່ມາເມື່ອຫມົດຊາວປີ, ທີ່ໂຊໂລໂມນໄດ້ຊົງສ້າງພຣະວິຫານຂອງພຣະຢາເວ ແລະ ພະຣາຊະວັງສ່ວນພະອົງ,
[2]ໂຊໂລໂມນໄດ້ຊົງເສີມສ້າງຫົວເມືອງຊຶ່ງຮູຣາມໄດ້ຖວາຍແກ່ພະອົງ, ແລະ ໃຫ້ຄົນອິສະຣາເອນອາສັຍຢູ່ໃນນັ້ນ.

[3]ໂຊໂລໂມນໄດ້ສະເດັດໄປຍັງຮາມັດໂຊບາ ແລະ ຍຶດເມືອງນັ້ນໄດ້.[4]ພະອົງໄດ້ຊົງສ້າງເມືອງຕາດໂມໄວ້ໃນຖິ່ນແຫ້ງແລ້ງກັນດານ, ແລະ
ຫົວເມືອງຄັງຫລວງທັງຫມົດ, ຊຶ່ງພະອົງຊົງສ້າງໄວ້ໃນຮາມັດ.
[5]ພະອົງໄດ້ຊົງສ້າງເມືອງເບັດໂຮໂຣນເທິງ, ແລະ ເບັດໂຮໂຣນລຸ່ມດ້ວຍ, ເປັນເມືອງທີ່ຫມັ້ນຄົງ ມີກຳແພງ, ປະຕູເມືອງ, ແລະດານ.
[6]ພະອົງໄດ້ຊົງສ້າງເມືອງບາອາລາດ ແລະ ຫົວເມືອງຄັງຫລວງທັງປວງທີ່ໂຊໂລໂມນຊົງມີຢູ່, ແລະ ເມືອງທັງປວງສຳລັບຣົດຮົບຂອງພະອົງ, ແລະ
ເມືອງທັງປວງສຳລັບພົນທະຫານມ້າຂອງພະອົງ, ແລະ ສິ່ງໃດຊຶ່ງພະອົງປະສົງຈະສ້າງໃນເຢຣູຊາເລັມ, ໃນເລບານອນ ແລະ
ໃນແຜ່ນດິນທັງຫມົດທີ່ຢູ່ໃນປົກຄອງຂອງພະອົງ.
[7]ປະຊາຊົນທັງປວງທີ່ເຫລືອຢູ່ໃນພວກຄົນຮິດຕີ, ຄົນອະໂມຣິດ, ຄົນເປຣິຊີ, ຄົນຮີວີ, ແລະ ຄົນເຢບຸດ, ຜູ້ທີ່ບໍ່ແມ່ນອິສະຣາເອນ,
[8]ຈາກລູກຫລານຂອງຄົນເຫລົ່ານີ້ ຜູ້ເຫລືອຕໍ່ມາໃນແຜ່ນດິນ, ຜູ້ຊຶ່ງປະຊາຊົນອິສະຣາເອນບໍ່ໄດ້ທຳລາຍ—
ໂຊໂລໂມນໄດ້ໃຫ້ປະຊາຊົນເຫລົ່ານີ້ເປັນຂ້າທາດແຮງງານ, ຊຶ່ງພວກເຂົາທັງຫລາຍກໍເປັນຢູ່ຈົນທຸກມື້ນີ້.
[9]ແຕ່ສ່ວນຄົນອິສຣາເອນນັ້ນໂຊໂລໂມນບໍ່ໄດ້ໃຫ້ເປັນຂ້າທາດແຮງງານ. ພວກເຂົາທັງຫລາຍເປັນທະຫານ ແລະ ເປັນນາຍທະຫານຂອງພະອົງ,
ເປັນຜູ້ບັງຄັບບັນຊາຣົດຮົບຂອງພະອົງ, ແລະ ພົນທະຫານມ້າຂອງພະອົງ.[10]ຄົນຕໍ່ໄປນີ້ເປັນເຈົ້າຫນ້າທີ່ຊັ້ນຜູ້ໃຫຍ່ຂອງກະສັດໂຊໂລໂມນ,
ມີສອງຮ້ອຍຫ້າສິບຄົນ, ເປັນຜູ້ປົກຄອງປະຊາຊົນຜູ້ທີ່ໄດ້ເຮັດວຽກງານ.
[11]ໂຊໂລໂມນຊົງນຳທິດາຂອງຟາຣາໂອຂຶ້ນມາຈາກນະຄອນດາວິດ ມາໃນພະຣາຊະວັງທີ່ພະອົງຊົງສ້າງໄວ້ໃຫ້ພະນາງ, ເພາະພະອົງກ່າວວ່າ,
“ມະເຫສີຂອງເຮົາບໍ່ຄວນຢູ່ໃນວັງຂອງດາວິດກະສັດແຫ່ງອິສະຣາເອນ,
ເພາະສະຖານທີ່ທັງຫລາຍທີ່ຫີບຂອງພຣະຢາເວມາເຖິງເປັນບ່ອນບໍຣິສຸດ.”
[12]ແລ້ວໂຊໂລໂມນຊົງຖວາຍເຄື່ອງເຜົາບູຊາແດ່ພຣະຢາເວເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າ ຊຶ່ງພະອົງຊົງສ້າງໄວ້ຢູ່ຫນ້າລະບຽງ.
[13]ພະອົງໄດ້ຖວາຍເຄື່ອງບູຊາຕາມຫນ້າທີ່ປະຈຳວັນທີ່ຕ້ອງເຮັດ, ເປັນການຖວາຍບູຊາຕາມບັນຍັດຂອງໂມເຊ, ໃນວັນສະບາໂຕ,
ໃນວັນຂຶ້ນຄ່ຳຫນຶ່ງ, ແລະ ໃນວັນເທສະການຕາມກຳນົດ ປະຈຳປີສາມເທສະການຄື ເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ, ເທສະການເກັບກ່ຽວ
ແລະ ເທສະການປຸກຕູບຢູ່.
[14]ຮັກສາຕາມພະບັນຊາຂອງດາວິດ ບິດາຂອງພະອົງ, ພະອົງຊົງກຳນົດແບ່ງເວນຍາມປະໂລຫິດສຳລັບການບົວລະບັດ, ແລະ
ແບ່ງຄົນເລວີໃຫ້ປະຈຳຫນ້າທີ່ການສັນຣະເສີນ, ແລະ ການບົວລະບັດຕໍ່ຫນ້າປະໂລຫິດ, ຕາມຫນ້າທີ່ປະຈຳວັນທີ່ຕ້ອງເຮັດ.
ຄົນເຝົ້າປະຕູທຸກປະຕູໂດຍເປັນພະແນກຕ່າງໆ, ເພາະວ່າດາວິດ, ຄົນຂອງພຣະເຈົ້າ, ຊົງບັນຊາໄວ້ເຊັ່ນນັ້ນ,
[15]ພວກເຂົາທັງຫລາຍບໍ່ໄດ້ຫັນໄປຈາກສິ່ງທີ່ກະສັດໄດ້ຊົງບັນຊາປະໂລຫິດ ແລະ ຄົນເລວີກ່ຽວກັບເລື່ອງໃດ, ຫລື ກ່ຽວກັບເລື່ອງຄັງຕ່າງໆ.
[16]ບັນດາພະຣາຊະກິດຂອງໂຊໂລໂມນກໍລຸລ່ວງໄປ, ຕັ້ງແຕ່ມື້ທີ່ວາງຮາກພຣະວິຫານຂອງພຣະຢາເວ ຈົນສຳເລັດງານ. ດັ່ງນັ້ນ
ພຣະວິຫານຂອງພຣະຢາເວກໍສຳເລັດຄົບຖ້ວນ.[17]ແລ້ວໂຊໂລໂມນສະເດັດໄປໃນເອັດຊີໂອນເກເບ ແລະ
ເມືອງເອລັດທີ່ແຄມທະເລໃນແຜ່ນດິນເອໂດມ.[18]ຮູຣາມໄດ້ສົ່ງມາຖວາຍພະອົງຊຶ່ງບັນຊາການໂດຍຂ້າຣາຊະການທີ່ຄຸ້ນເຄີຍກັບທະເລ.
ພວກເຂົາໄດ້ໄປເຖິງເມືອງໂອຟີພ້ອມກັບຂ້າຣາຊະການຂອງໂຊໂລໂມນ.
ພວກເຂົາໄດ້ນຳເອົາຄຳຈາກບ່ອນນັ້ນຫນັກສີ່ຮ້ອຍຫ້າສິບຕາລັນຕົນມາໃຫ້ກະສັດໂຊໂລໂມນ.


generated on Tue Jun 17 19:01:42 2025

9 [1]ເມື່ອພະຣາຊີນີແຫ່ງເຊບາຊົງໄດ້ຍິນກິດຕິສັບຂອງໂຊໂລໂມນ, ພະນາງກໍສະເດັດມາເຢຣູຊາເລັມ ເພື່ອທົດລອງພະອົງດ້ວຍບັນຫາຍາກຕ່າງໆ.
ພະນາງໄດ້ມາພ້ອມດ້ວຍຂ້າຣາຊະບໍຣິພານຫລວງຫລາຍ, ກັບອູດບັນທຸກເຄື່ອງຫອມ, ຄຳເປັນຈຳນວນຫລາຍ, ແລະ ກັບເພັດພອຍຕ່າງໆ.
ເມື່ອພະນາງສະເດັດມາເຖິງໂຊໂລໂມນແລ້ວ, ພະນາງທູນເລື່ອງໃນໃຈຂອງພະນາງທຸກປະການ.
[2]ໂຊໂລໂມນກ່າວຕອບບັນຫາຂອງພະນາງທັງຫມົດ; ບໍ່ມີສິ່ງໃດທີ່ເຊື່ອງໄວ້ໃນໂຊໂລໂມນ;
ບໍ່ມີຄຳຖາມໃດຊຶ່ງພະອົງຈະຊົງອະທິບາຍແກ່ພະນາງບໍ່ໄດ້.

[3]ເມື່ອພະຣາຊີນີແຫ່ງເຊບາຊົງເຫັນພະສະຕິປັນຍາຂອງໂຊໂລໂມນ ແລະ ພະຣາຊະວັງທີ່ພະອົງຊົງສ້າງ,[4]ທັງອາຫານທີ່ຢູ່ເທິງໂຕະສະເຫວີຍ,
ກັບບັນດາຂ້າຣາຊະການປະຈຳຢູ່, ແລະ ຂ້າໃຊ້ທີ່ຄອຍຖ້າຮັບໃຊ້ຢູ່ ແລະ ຕະຫລອດຈົນເຄື່ອງແຕ່ງກາຍ, ແລະພະນັກງານເຊີນຖ້ວຍຂອງພະອົງ
ແລະ ລັກສະນະທ່າທາງທີ່ພະອົງໄດ້ຖວາຍເຄື່ອງເຜົາບູຊາໃນພຣະວິຫານຂອງພຣະຢາເວ, ພະທັຍຂອງພະນາງກໍເສົ້າສະຫລົດໃຈລົງບາດດຽວ.
[5]ພະນາງທູນກະສັດວ່າ, “ຂ່າວຄາວທີ່ຂ້ານ້ອຍໄດ້ຍິນໃນປະເທດຂອງຂ້ານ້ອຍເຖິງພະຣາຊະກິດ ແລະ ພະສະຕິປັນຍາຂອງພະອົງເປັນຄວາມຈິງ.
[6]ແຕ່ຂ້ານ້ອຍບໍ່ໄດ້ເຊື່ອຖ້ອຍຄຳນັ້ນ ຈົນຂ້ານ້ອຍມາເຝົ້າ, ແລະ ຕາຂອງຂ້ານ້ອຍໄດ້ເຫັນເອງ. ເບິ່ງແມ
ທີ່ພວກເຂົາບອກແກ່ຂ້ານ້ອຍກໍບໍ່ເທົ່າເຄິ່ງຫນຶ່ງຂອງພະສະຕິປັນຍາອັນຍິ່ງໃຫຍ່ຂອງພະອົງ!
ພະອົງລ້ຳເລີດຫລາຍກວ່າຂ່າວຄາວທີ່ຂ້ານ້ອຍໄດ້ຍິນ.
[7]ບັນດາຄົນຂອງພະອົງກໍເປັນສຸກ, ບັນດາຂ້າຣາຊະການ ຜູ້ຢູ່ງານປະຈຳຕໍ່ພະພັກພະອົງ ແລະ ຟັງພະສະຕິປັນຍາຂອງພະອົງກໍເປັນສຸກ.
[8]ສາທຸການແດ່ພຣະຢາເວ ພຣະເຈົ້າຂອງພະອົງ, ຜູ້ຊົງພໍພຣະທັຍໃນພະອົງ, ຊົງແຕ່ງຕັ້ງພະອົງໄວ້ເທິງບັນລັງ, ເປັນກະສັດເພື່ອພຣະຢາເວ
ພຣະເຈົ້າຂອງພະອົງ. ເພາະພຣະເຈົ້າຂອງພະອົງຊົງຮັກອິສະຣາເອນ, ຈະສະຖາປະນາໄວ້ເປັນນິດ,
ພຣະອົງຈຶ່ງໄດ້ຊົງແຕ່ງຕັ້ງໃຫ້ພະອົງເປັນກະສັດເຫນືອພວກເຂົາທັງຫລາຍ, ເພື່ອພະອົງຈະຊົງອຳນວຍຄວາມຍຸຕິທັມ ແລະ ຄວາມທ່ຽງທັມ!”
[9]ແລ້ວພະນາງກໍຖວາຍ 120 ຕະລັນຕົນແກ່ກະສັດ ແລະ ທັງເຄື່ອງຫອມເປັນຈຳນວນຫລາຍ ແລະ ເພັດພອຍຕ່າງໆ.
ບໍ່ມີເຄື່ອງຫອມໃດຄືທີ່ພະຣາຊີນີແຫ່ງເມືອງເຊບາຖວາຍແກ່ກະສັດໂຊໂລໂມນ.
[10]ຂ້າຣາຊະການຂອງຮູຣາມ ແລະ ຂ້າຣາຊະການຂອງໂຊໂລໂມນ, ຜູ້ນຳຄຳມາຈາກໂອຟີ, ໄດ້ນຳໄມ້ດູ່ ແລະ ເພັດພອຍຕ່າງໆມາ.
[11]ແລ້ວກະສັດຊົງໃຊ້ໄມ້ດູ່ເຮັດຂັ້ນໄດພຣະວິຫານຂອງພຣະຢາເວ ແລະ ພະຣາຊະວັງ, ທັງເຮັດພິນຄູ່ ແລະ ພິນໃຫຍ່ໃຫ້ແກ່ນັກຮ້ອງ.
ຊຶ່ງແຕ່ກ່ອນບໍ່ເຄີຍເຫັນມີແບບນີ້ໃນແຜ່ນດິນຢູດາ.
[12]ກະສັດໂຊໂລໂມນພະຣາຊະທານທຸກຢ່າງແກ່ພະຣາຊີນີແຫ່ງເຊບາຕາມທີ່ພະນາງຊົງມີພະປະສົງ, ບໍ່ວ່າພະນາງຈະທູນຂໍສິ່ງໃດ,
ນອກເຫນືອໄປຈາກສິ່ງທີ່ພະນາງນຳມາຖວາຍກະສັດ. ດັ່ງນັ້ນພະນາງກໍສະເດັດກັບໄປແຜ່ນດິນຂອງພະນາງ,
ພ້ອມກັບຂ້າຣາຊະການຂອງພະນາງ.
[13]ນ້ຳຫນັກຄຳທີ່ນຳມາສູ່ໂຊໂລໂມນໃນປີຫນຶ່ງນັ້ນ ເປັນຄຳ 666 ຕະລັນຕົນ,[14]ນອກເຫນືອຈາກຄຳທີ່ນັກການຄ້າ ແລະ ພໍ່ຄ້າໄດ້ນຳມາ.
ກະສັດທັງປວງຂອງປະເທດອາຫລັບ ແລະ ບັນດາເຈົ້າເມືອງແຫ່ງແຜ່ນດິນໄດ້ນຳຄຳ ແລະເງິນມາໃຫ້ໂຊໂລໂມນ.
[15]ກະສັດໂຊໂລໂມນຊົງສ້າງໂລ່ໃຫຍ່ສອງຮ້ອຍອັນດ້ວຍຄຳ. ໂລ່ອັນຫນຶ່ງໃຊ້ຄຳຕີຫົກຮ້ອຍເຊເຂ.[16]ພະອົງຊົງສ້າງໂລ່ສາມຮ້ອຍອັນດ້ວຍຄຳ.
ໂລ່ອັນຫນຶ່ງໃຊ້ຄຳສາມຮ້ອຍເຊເຂ; ກະສັດກໍຊົງເກັບໂລ່ໄວ້ໃນພະຣາຊະວັງແຫ່ງປ່າເລບານອນ.
[17]ກະສັດຊົງສ້າງພະທີ່ນັ່ງງາຊ້າງຂະຫນາດໃຫຍ່ດ້ວຍ ແລະ ຊົງໂອບດ້ວຍຄຳບໍຣິສຸດ.[18]ພະທີ່ນັ່ງນັ້ນມີຂັ້ນໄດຫົກຂັ້ນ,
ແລະບ່ອນຮອງພະບາດເຮັດດ້ວຍຄຳທີ່ຕິດຢູ່ກັບພະທີ່ນັ່ງ. ທັງສອງຂ້າງຂອງພະທີ່ນັ່ງມີບ່ອນວາງພະຫັດ, ແລະ
ສິງໃຫຍ່ສອງໂຕຢືນຢູ່ຂ້າງບ່ອນວາງພະຫັດ.
[19]ມີສິງໃຫຍ່ອີກສິບສອງຕົວຢືນຢູ່ບ່ອນນັ້ນ, ເທິງບັນໄດຫົກຂັ້ນທັງສອງຂ້າງ. ພວກເຂົາບໍ່ເຄີຍເຮັດໃນຣາຊະອານາຈັກໃດຄືແບບນີ້.
[20]ພາຊະນະທັງຫມົດສຳລັບເຄື່ອງດື່ມຂອງກະສັດໂຊໂລໂມນເຮັດດ້ວຍຄຳ, ແລະ
ພາຊະນະທັງຫມົດຂອງພະຣາຊະວັງປ່າເລບານອນເຮັດດ້ວຍຄຳບໍຣິສຸດ. ບໍ່ມີບ່ອນໃດເຮັດດ້ວຍເງິນເລີຍ
ເພາະວ່າເງິນນັ້ນຖືວ່າເປັນຂອງບໍ່ມີຄ່າຫຍັງໃນສະໄຫມຂອງໂຊໂລໂມນ.[21]ກະສັດມີກອງເຮືອທາງທະເລ, ພ້ອມກັບກອງເຮືອຂອງຮູຣາມ.
ກຳປັ່ນຕາຊິດນຳຄຳ, ເງິນ, ແລະ ງາຊ້າງ, ທັງ ລີງ ແລະ ນົກຍູງ ມາສາມປີຕໍ່ເທື່ອ.
[22]ດັ່ງນັ້ນແຫລະ ກະສັດໂຊໂລໂມນຈຶ່ງໄດ້ປຽບກວ່າກະສັດອື່ນແຫ່ງແຜ່ນດິນໂລກໃນເລື່ອງຊັບສົມບັດ ແລະ ສະຕິປັນຍາ.
[23]ແລະກະສັດທັງຫມົດແຫ່ງແຜ່ນດິນໂລກກໍສະແຫວງຫາທີ່ຈະເຂົ້າເຝົ້າໂຊໂລໂມນ ເພື່ອຈະຟັງພະສະຕິປັນຍາ,
ທີ່ພຣະເຈົ້າຊົງພຣະຣາຊະທານໄວ້ໃນໃຈຂອງພະອົງ.[24]ທຸກຄົນກໍນຳເຄື່ອງບັນນາການຂອງຕົນມາ ເປັນເຄື່ອງເຮັດດ້ວຍເງິນ ເຄື່ອງເຮັດດ້ວຍຄຳ,
ແລະ ເຄື່ອງແຕ່ງກາຍ, ເຄື່ອງອາວຸດ, ແລະ ເຄື່ອງຫອມ, ທັງ ມ້າ ແລະລໍ, ຕາມຈຳນວນກຳນົດທຸກປີ.
[25]ໂຊໂລໂມນຊົງມີໂຮງລ້ຽງມ້າສີ່ພັນບ່ອນສຳລັບມ້າ ແລະຣົດຮົບ, ແລະ ມີພົນທະຫານຂີ່ມ້າຫນຶ່ງຫມື່ນສອງພັນຄົນ,
ຊຶ່ງພະອົງຊົງໃຫ້ປະຈຳຢູ່ໃນຫົວເມືອງຣົດຮົບ ແລະ ຢູ່ກັບກະສັດທີ່ເມືອງເຢຣູຊາເລັມ.
[26]ພະອົງຊົງປົກຄອງເຫນືອກະສັດທັງປວງຕັ້ງແຕ່ແມ່ນ້ຳຮອດແຜ່ນດິນຂອງຄົນຟີລິສະຕິນ, ແລະຮອດເຂດແດນຂອງເອຢິບ.
[27]ກະສັດຊົງເຮັດໃຫ້ເງິນນັ້ນເປັນຂອງທຳມະດາໃນເມືອງເຢຣູຊາເລັມ,ເຫມືອນກ້ອນຫີນເທິງພື້ນດິນ.
ພະອົງເຮັດໃຫ້ມີໄມ້ສົນຢ່າງຫລວງຫລາຍຄືກັບໄມ້ຫມາກເດື່ອທີ່ມີໃນທີ່ລຸ່ມ.[28]ພວກເຂົານຳມ້າເຂົ້າມາຖວາຍໂຊໂລໂມນຈາກເອຢິບ ແລະ
ຈາກແຜ່ນດິນທັງປວງ.[29]ສ່ວນພະຣາຊະກິດນອກນັ້ນຂອງໂຊໂລໂມນ, ຕັ້ງແຕ່ຕົ້ນຈົນຈົບ, ກໍໄດ້ບັນທຶກໄວ້ໃນຫນັງສືຂອງນາທານຜູ້ທຳນວາຍ,
ໃນຄຳທຳນວາຍຂອງອາຮີຢາຊາວຊີໂລ, ແລະໃນນິມິດຂອງອິດໂດຜູ້ທຳນວາຍກ່ຽວກັບເຢໂຣໂບອາມລູກຊາຍເນບັດ?
[30]ໂຊໂລໂມນຊົງປົກຄອງໃນເມືອງເຢຣູຊາເລັມເຫນືອອິສະຣາເອນທັງປວງສີ່ສິບປີ.[31]ໂຊໂລໂມນລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ ແລະ
ພວກເຂົາຝັງພະສົບໄວ້ໃນນະຄອນດາວິດບິດາຂອງພະອົງ. ເຣໂຣໂບອາມ, ລູກຊາຍຂອງພະອົງ, ຂຶ້ນປົກຄອງແທນພະອົງ.

10 1ເຣໂຮໂບອາມໄດ້ໄປເມືອງເຊເຄັມ, ເພາະອິສຣາເອນທັງປວງໄດ້ມາເຊເຄັມ ເພື່ອຈະຕັ້ງພະອົງໃຫ້ເປັນກະສັດ.
2ຢູ່ມາເມື່ອເຢໂຣໂບອາມລູກຊາຍເນບັດໄດ້ຍິນເລື່ອງນັ້ນ ເພາະເພິ່ນຍັງຢູ່ໃນເອຢິບ, ບ່ອນທີ່ເພິ່ນຫນີຈາກພະພັກກະສັດໂຊໂລໂມນ,
ແຕ່ເຢໂຣໂບອາມກໍກັບຈາກເອຢິບ.

3ພວກເຂົາທັງຫລາຍກໍໃຊ້ຄົນໄປຮຽນເຊີນເພິ່ນ, ແລະເຢໂຣໂບອາມ ແລະ ອິສະຣາເອນທັງຫມົດໄດ້ມາ; ພວກເຂົາໄດ້ທູນເຣໂຮໂບອາມວ່າ,
4“ບິດາຂອງພະອົງໄດ້ເຮັດໃຫ້ແອກຂອງຂ້າພະອົງທຸກຫນັກ. ເພາະສະນັ້ນ ບັດນີ້, ຂໍຊົງຜ່ອນການບົວລະບັດຢ່າງທຸກຫນັກຂອງບິດາຂອງພະອົງ,
ແລະ ແອກອັນຫນັກຂອງພະອົງເຫນືອຂ້າພະອົງທັງຫລາຍໃຫ້ເບົາລົງ, ແລະ
ຂ້າພະອົງທັງຫລາຍຈະບົວລະບັດພະອົງ.”5ເຣໂຮໂບອາມກ່າວກັບພວກເຂົາວ່າ, “ຄົບສາມມື້ຈຶ່ງກັບມາຫາເຮົາອີກ.” ປະຊາຊົນຈຶ່ງກັບໄປ.
6ກະສັດເຣໂຮໂບອາມກໍຊົງປຶກສາກັບບັນດາຜູ້ເຖົ້າ ຜູ້ຢູ່ງານປະຈຳໂຊໂລໂມນ ບິດາຂອງພະອົງ ຂະນະທີ່ພະອົງຍັງຊົງພະຊົນຢູ່; ພະອົງກ່າວວ່າ,
“ທ່ານທັງຫລາຍຈະແນະນຳເຮົາໃຫ້ຕອບປະຊາຊົນນີ້ຢ່າງໃດ?”7ພວກເຂົາທັງຫລາຍທູນພະອົງວ່າ, “ຖ້າພະອົງຊົງເມດຕາແກ່ປະຊາຊົນນີ້ ແລະ
ເຮັດໃຫ້ພວກເຂົາພໍໃຈ, ແລະກ່າວຕອບຄຳດີແກ່ພວກເຂົາ, ພວກເຂົາກໍຈະເປັນຜູ້ຮັບໃຊ້ຂອງພະອົງເປັນນິດ.”
8ແຕ່ເຣໂຮໂບອາມຊົງປະຖິ້ມຄຳປຶກສາທີ່ຜູ້ເຖົ້າຖວາຍນັ້ນ, ແລະ ໄປປຶກສາກັບຄົນຫນຸ່ມ ຊຶ່ງເຕີບໃຫຍ່ຂຶ້ນມາພ້ອມກັບພະອົງ, ແລະ
ຢູ່ງານປະຈຳພະອົງ.9ພະອົງກ່າວກັບພວກເຂົາທັງຫລາຍວ່າ, “ທ່ານຈະແນະນຳເຮົາຢ່າງໃດ, ເພື່ອພວກເຮົາຈະຕອບປະຊາຊົນນີ້ຜູ້ທີ່ທູນເຮົາວ່າ,
‘ຂໍຊົງຜ່ອນແອກທີ່ບິດາຂອງພະອົງວາງຢູ່ເຫນືອຂ້າພະອົງທັງຫລາຍໃຫ້ເບົາລົງ?"
10ຄົນຫນຸ່ມເຫລົ່ານັ້ນຜູ້ໄດ້ເຕີບໃຫຍ່ມາພ້ອມກັບເຣໂຮໂບອາມທູນພະອົງ, ກ່າວວ່າ,
“ພຣະອົງຈົ່ງກ່າວດັ່ງນີ້ແກ່ປະຊາຊົນວ່າຜູ້ໄດ້ກ່າວກັບພະອົງວ່າ
ໂຊໂລໂມນພຣະຣາຊາບິດາຂອງພະອົງໄດ້ຊົງເຮັດໃຫ້ແອກຂອງຂ້າພະອົງທັງຫລາຍຫນັກ, ແຕ່ພະອົງຕ້ອງຊົງເຮັດໃຫ້ມັນເບົາລົງ.
ນີ້ຄືສິ່ງທີ່ພະອົງຄວນກ່າວກັບພວກເຂົາ, ‘ນິ້ວກ້ອຍຂອງເຮົາກໍຫນັກກວ່າແອກຂອງ ບິດາຂອງເຮົາ.11ດັ່ງນັ້ນ,
ບັດນີ້ເຖິງແມ່ນວ່າບິດາຂອງເຮົາວາງແອກຫນັກເທິງທ່ານທັງຫລາຍກໍດີແລ້ວ, ເຮົາຈະເພີ່ມແອກໃຫ້ແກ່ທ່ານທັງຫລາຍອີກ.
ບິດາຂອງເຮົາຕີສອນທ່ານທັງຫລາຍດ້ວຍໄມ້ແສ້, ແຕ່ເຮົາຈະຕີສອນທ່ານທັງຫລາຍດ້ວຍແສ້ແມງງອດ.’”
12ດັ່ງນັ້ນເຢໂຣໂບອາມກັບປະຊາຊົນທັງປວງຈຶ່ງເຂົ້າມາເຝົ້າເຣໂຮໂບອາມໃນມື້ທີສາມ, ດັ່ງທີ່ກະສັດໄດ້ຮັບສັ່ງ,
"ອີກສາມວັນຈົ່ງມາຫາເຮົາ."13ເຣໂຮໂບອາມໄດ້ກ່າວຕໍ່ເຂົາຢ່າງຫຍາບຄາຍ, ພຣະອົງຊົງປະຖິ້ມຄຳປຶກສາຂອງຜູ້ເຖົ້າ.
14ໂດຍກ່າວກັບພວກເຂົາຕາມຄຳແນະນຳຂອງພວກຄົນຫນຸ່ມວ່າ “ບິດາຂອງເຮົາເຮັດແອກຂອງທ່ານທັງຫລາຍໃຫ້ຫນັກ,
ແຕ່ເຮົາຈະເພີ່ມໃຫ້ແກ່ແອກນັ້ນ. ບິດາຂອງເຮົາຕີສອນທ່ານທັງຫລາຍດ້ວຍໄມ້ແສ້, ແຕ່ເຮົາຈະຕີສອນທ່ານທັງຫລາຍດ້ວຍແສ້ແມງງອດ.”
15ດັ່ງນັ້ນ ກະສັດຈຶ່ງບໍ່ໄດ້ຊົງຟັງສຽງປະຊາຊົນ, ເພາະເຫດການນີ້ເປັນມາແຕ່ພຣະເຈົ້າ, ເພື່ອພຣະຢາເວຈະຊົງໃຫ້
ພຣະທັມຂອງພຣະອົງໄດ້ສຳເລັດ ຊຶ່ງພຣະອົງກ່າວໂດຍອາຮີຢາຊາວຊີໂລແກ່ເຢໂຣໂບອາມລູກຊາຍເນບັດ.
16ເມື່ອອິສະຣາເອນທັງປວງເຫັນວ່າກະສັດບໍ່ໄດ້ຊົງຟັງພວກເຂົາ, ປະຊາຊົນກໍທູນຕອບກະສັດ ແລະ ກາ່ວວ່າ,
“ຂ້າພະອົງທັງຫລາຍມີສ່ວນຫຍັງໃນດາວິດ? ຂ້າພະອົງທັງຫລາຍບໍ່ມີສ່ວນມໍຣະດົກໃນລູກເຢຊີ! ໂອ ອິສະຣາເອນເອີຍ
ກັບໄປເຕັນຂອງຕົນແຕ່ລະຄົນສາ. ຂ້າແຕ່ດາວິດ ຈົ່ງເບິ່ງແຍງຣາຊະວົງຂອງພະອົງເອງເຖີດ.”
ອິສະຣາເອນທັງປວງຈຶ່ງກັບໄປໃນເຕັນຂອງໃຜລາວ.17ແຕ່ເຣໂຮໂບອາມຊົງປົກຄອງເຫນືອປະຊາຊົນອິສະຣາເອນຜູ້ອາສັຍຢູ່ໃນຫົວເມືອງຢູດາ.
18ແລ້ວກະສັດເຣໂຮໂບອາມຊົງໃຊ້ຮາໂດຣາມ, ຄົນຄຸມແຮງງານໄປເກນຄົນ ແລະ ປະຊາຊົນອິສະຣາເອນກໍເອົາຫີນຄວ່າງເພິ່ນຈົນຕາຍ.
ກະສັດເຣໂຮໂບອາມກໍຊົງຮີບຂຶ້ນຣົດຮົບຂອງພະອົງ ຊົງຫນີໄປເມືອງເຢຣູຊາເລັມ.
19ດັ່ງນັ້ນຄົນອິສະຣາເອນຈຶ່ງກະບົດຕໍ່ຣາຊະວົງຂອງດາວິດເຖິງທຸກມື້ນີ້.


generated on Tue Jun 17 19:01:42 2025

11 [1]ເມື່ອເຣໂຣໂບອາມມາເຖິງເມືອງເຢຣູຊາເລັມແລ້ວ, ພະອົງໄດ້ຊຶ່ງຮວບຮວມເຊື້ອສາຍຢູດາ ແລະ ເບັນຢາມິນ, ເປັນນັກຮົບທີ່ຄັດເລືອກແລ້ວ
180,000 ຄົນ, ເພື່ອຈະສູ້ຮົບກັບອິສະຣາເອນ, ຫມາຍຈະເອົາຣາຊະອານາຈັກຄືນມາໃຫ້ແກ່ເຣໂຣໂບອາມ.

[2]ແຕ່ພຣະທັມຂອງພຣະຢາເວມາເຖິງເຊມາຢາຄົນຂອງພຣະເຈົ້າ, ກ່າວວ່າ,[3]“ຈົ່ງໄປທູນເຣໂຣໂບອາມລູກຊາຍຂອງໂຊໂລໂມນ, ກະສັດແຫ່ງຢູດາ,
ແລະ ບອກແກ່ອິສະຣາເອນທັງປວງໃນຢູດາ ແລະ ເບັນຢາມິນວ່າ,[4]‘ພຣະຢາເວກ່າວດັ່ງນີ້ວ່າ," ເຈົ້າຢ່າຂຶ້ນໄປສູ້ຮົບກັບພີ່ນ້ອງຂອງເຈົ້າ.
ຈົ່ງກັບໄປເຮືອນຂອງຕົນທຸກຄົນສາ, ເພາະສິ່ງນີ້ເປັນມາຈາກເຮົາ.'” ເຫດສະນັ້ນ ພວກເຂົາຈຶ່ງເຊື່ອຟັງພຣະທັມຂອງພຣະຢາເວ ແລະ ກັບໄປ
ບໍ່ໄດ້ສູ້ຮົບກັບເຢໂຣໂບອາມ.
[5]ເຣໂຣໂບອາມປະທັບໃນເມືອງເຢຣູຊາເລັມ ແລະ ພະອົງຊົງສ້າງຫົວເມືອງຕ່າງໆໃນຢູດາເພື່ອປ້ອງກັນ.[6]ພະອົງຊົງສ້າງເມືອງເບັດເລເຮັມ,
ເອຕາມ, ເຕໂກອາ[7]ເບັດຊູເຣ, ໂສໂກ, ອະດຸລາມ,[8]ເມືອງກັດ, ມາເຣຊາ, ແລະ ຊິເຟ[9]ອາໂດຣາຢິມ, ລາກິດ, ອາເຊກາ,[10]ໂຊຣາ, ອາຢາໂລນ
ແລະເຮັບໂຣນ. ຫົວເມືອງຊຶ່ງມີປ້ອມທີ່ຢູ່ໃນຢູດາ ແລະ ໃນເບັນຢາມິນ.
[11]ພະອົງຊົງສ້າງປ້ອມປ້ອງກັນໃຫ້ແຂງແຮງ ແລະ ຕັ້ງຜູ້ບັງຄັບບັນຊາໃນປ້ອມເຫລົ່ານັ້ນ, ແລະຊົງສະສົມອາຫານ, ນ້ຳມັນ, ແລະ ນ້ຳອະງຸ່ນ.
[12]ພະອົງຊົງເກັບໂລ່ ແລະ ຫອກໄວ້ໃນຫົວເມືອງທັງປວງ ແລະ ເຮັດໃຫ້ຫົວເມືອງເຫລົ່ານັ້ນແຂງແຮງຫລາຍ. ພະອົງຈຶ່ງຊົງຍຶດຢູດາ ແລະ
ເບັນຢາມິນໄວ້ໄດ້.
[13]ປະໂລຫິດກັບຄົນເລວີທີ່ຢູ່ໃນອິສະຣາເອນທັງຫມົດໄດ້ເຂົ້າມາຫາພະອົງຈາກເຂດແດນທີ່ພວກເຂົາອາສັຍຢູ່.[14]ເພາະຄົນເລວີປະຖິ້ມທົ່ງຫຍ້າ
ແລະ ເຮືອນທີ່ພວກເຂົາຍຶດຖືເປັນກຳສິດ ເພື່ອທີ່ຈະມາຍັງຢູດາ ແລະ ເຢຣູຊາເລັມ, ເພາະເຢໂຣໂບອາມ
ແລະລູກຊາຍຂອງພະອົງໄດ້ຂັບໄລ່ພວກເຂົາອອກຈາກຕຳແຫນ່ງ, ດັ່ງນັ້ນພວກເຂົາຈຶ່ງບໍ່ສາມາດປະຕິບັດຫນ້າທີ່ປະໂລຫິດຂອງພຣະຢາເວ.
[15]ເຢໂຣໂບອາມຊົງແຕ່ງຕັ້ງປະໂລຫິດຂອງພະອົງຂຶ້ນສຳລັບປູຊະນີຍະສະຖານສູງທັງຫລາຍ ແລະ ສຳລັບຜີປີສາດ
ແລະສຳລັບຮູບລູກງົວຊຶ່ງພະອົງຊົງສ້າງຂຶ້ນ.
[16]ບັນດາປະຊາຊົນຈາກຈາກຕະກູນທັງປວງໃນອິສະຣາເອນ, ຜູ້ທີ່ປັກໃຈສະແຫວງຫາພຣະຢາເວ ພຣະເຈົ້າຂອງອິສະຣາເອນ;
ພວກເຂົາໄດ້ມາຍັງກຸງເຢລູຊາເລັມເພື່ອຖວາຍສັດບູຊາຕໍ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ.
[17]ດັ່ງນັ້ນພວກເຂົາໄດ້ເສີມກຳລັງໃຫ້ຣາຊະອານາຈັກຂອງຢູດາ ແລະ ໄດ້ເຮັດໃຫ້ເຣໂຣໂບອາມລູກຊາຍຂອງໂຊໂລໂມນເຂັ້ມແຂງຢູ່ໄດ້ສາມປີ,
ແລະ ພວກເຂົາດຳເນີນຢູ່ສາມປີໃນແບບວິຖີຊີວິດຂອງດາວິດ ແລະໂຊໂລໂມນ.
[18]ເຣໂຣໂບອາມຊົງຮັບເອົານາງມາຮາລາດມາເປັນມະເຫສີ, ທິດາຂອງເຢຣີໂມດ, ລູກຊາຍຂອງດາວິດ, ແລະ ອາບີຮາຍ,
ຜູ້ເປັນທິດາຂອງເອລີອາບ, ລູກຊາຍເຢຊີ.[19]ພະນາງກໍປະສູດລູກຊາຍໃຫ້ພະອົງຄື ເຢອຸດ, ເຊມາຣີຢາ ແລະ ຊາຮໍາ.
[20]ພາຍຫລັງມາຫະລັດ, ເຣໂຣໂບອາມກໍຊົງຮັບມາອາກາ, ທິດາຂອງອັບຊາໂລມ; ຜູ້ຊຶ່ງປະສູດ ອາບີຢາ, ອາດຕາຍ, ຊີຊາ
ແລະເຊໂລມິດໃຫ້ພະອົງ.[21]ເຣໂຣໂບອາມຊົງຮັກມາອາກາ, ທິດາຂອງອັບຊາໂລມ, ຫລາຍກວ່າມະເຫສີ ແລະ ນາງສະຫນົມຂອງພະອົງທັງຫມົດ
(ພະອົງມີມະເຫສີສິບແປດອົງ ແລະ ນາງສະຫນົມຫົກສິບຄົນ, ແລະ ໃຫ້ກຳເນີດລູກຊາຍຊາວແປດອົງ ແລະ ທິດາຫົກສິບອົງ).
[22]ເຣໂຣໂບອາມຊົງແຕ່ງຕັ້ງໃຫ້ອາບີຢາລູກຊາຍຂອງມາອາກາເປັນລູກຊາຍອົງໃຫຍ່, ໃຫ້ເປັນຫົວຫນ້າທ່າມກາງພີ່ນ້ອງຂອງຕົນ;
ເພາະພະອົງຊົງຕັ້ງພະທັຍຈະໃຫ້ເພິ່ນເປັນກະສັດ.[23]ເຣໂຣໂບອາມຊົງຈັດການຢ່າງສະຫລາດ;
ພະອົງໄດ້ແຈກຢາຍບັນດາລູກຊາຍຂອງພະອົງໄປທົ່ວແຜ່ນດິນທັງຫມົດຂອງຢູດາແລະ ເບັນຢາມິນ ໃນຫົວເມືອງທີ່ມີປ້ອມທັງຫມົດ.
ພະອົງປຣະທານສະບຽງອາຫານໃຫ້ຢ່າງອຸດົມສົມບູນ ແລະ ຊົງມີມະເຫສີຢ່າງຫລວງຫລາຍ.

 generated on Tue Jun 17 19:01:42 2025

12 [1]ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນ, ເມື່ອຣາຊະອານາຈັກຂອງເຣໂຮໂບອາມຕັ້ງຫມັ້ນຄົງ ແລະ ແຂງແຮງແລ້ວ,
ພະອົງຊົງປະຖິ້ມພຣະບັນຍັດຂອງພຣະຢາເວເສຍ ແລະ ອິສະຣາເອນທັງປວງກໍປະຖິ້ມພ້ອມກັບພະອົງດ້ວຍ.

[2]ຢູ່ມາໃນປີທີຫ້າຂອງກະສັດເຣໂຮໂບອາມ, ເພາະພວກເຂົາບໍ່ສັດຊື່ຕໍ່ພຣະຢາເວ, ຊີຊາກກະສັດແຫ່ງເອຢິບສະເດັດຂຶ້ນມາສູ້ຮົບກັບເຢຣູຊາເລັມ.
[3]ພະອົງມີຣົດຮົບຫນຶ່ງພັນສອງຮ້ອຍຄັນ ແລະ ພົນທະຫານມ້າຫົກຫມື່ນຄົນ. ພົນຜູ້ມາກັບພະອົງຈາກເອຢິບນັບບໍ່ຖ້ວນຄື ຊາວລີເບຍ, ຄົນສຸກກີ,
ແລະ ຄົນເອທີໂອເປຍ.[4]ພະອົງຊົງຍຶດຫົວເມືອງທີ່ມີປ້ອມຂອງຢູດາ ແລະ ກັບມາຍັງເຢຣູຊາເລັມ.
[5]ບັດນີ້ເຊມາຢາຜູ້ທຳນວາຍໄດ້ມາເຝົ້າເຣໂຮໂບອາມ ແລະບັນດາເຈົ້ານາຍແຫ່ງຢູດາ ຜູ້ມາປະຊຸມກັນຢູ່ທີ່ເຢຣູຊາເລັມດ້ວຍເລື່ອງຊີຊາກ
ແລ້ວກ່າວແກ່ພວກເຂົາທັງຫລາຍວ່າ, “ພຣະຢາເວກ່າວດັ່ງນີ້ວ່າ ເຈົ້າໄດ້ປະຖິ້ມເຮົາ,
ເຮົາຈຶ່ງໄດ້ປະຖິ້ມເຈົ້າໃຫ້ຢູ່ໃນມືຂອງຊີຊາກ.”[6]ແລ້ວເຈົ້ານາຍແຫ່ງອິສະຣາເອນ ແລະ ກະສັດໄດ້ຖ່ອມຕົວລົງ ແລະ ກ່າວວ່,
“ພຣະຢາເວຊົງຊອບທັມແລ້ວ.”
[7]ເມື່ອພຣະຢາເວຊົງເຫັນວ່າພວກເຂົາຖ່ອມຕົວລົງ, ພຣະທັມຂອງພຣະຢາເວໄດ້ມາເຖິງເຊມາຢາ, ກ່າວວ່າ, “ເຂົາທັງຫລາຍໄດ້ຖ່ອມຕົວລົງແລ້ວ,
ເຮົາຈຶ່ງຈະບໍ່ທຳລາຍພວກເຂົາ; ແຕ່ເຮົາຈະຊ່ວຍເຂົາໃຫ້ພົ້ນໃນລະດັບຫນຶ່ງ; ແລະ
ພຣະພິໂຣດຂອງເຮົາຈະບໍ່ຖອກລົງມາເຫນືອເຢຣູຊາເລັມໂດຍມືຂອງຊີຊາກ.[8]ຢ່າງໃດກໍດີ, ພວກເຂົາຕ້ອງເປັນຜູ້ຮັບໃຊ້ຂອງຊີຊາກ,
ເພື່ອພວກເຂົາຈະໄດ້ຮູ້ຄວາມແຕກຕ່າງລະຫວ່າງການຮັບໃຊ້ເຮົາ ແລະ ຮັບໃຊ້ຣາຊະອານາຈັກທັງຫລາຍຂອງແຜ່ນດິນໂລກ.”
[9]ດັ່ງນັ້ນຊີຊາກ, ກະສັດແຫ່ງເອຢິບຈຶ່ງຂຶ້ນມາຕໍ່ສູ້ເຢຣູຊາເລັມແລະ ພະອົງຊົງເກັບເອົາຊັບສິນແຫ່ງພຣະວິຫານຂອງພຣະຢາເວ, ແລະ
ຊັບສິນບັດໃນພະຣາຊະວັງ. ພະອົງຊົງເກັບເອົາໄປທຸກຢ່າງ; ຊົງເກັບເອົາໂລ່ຄຳທີ່ໂຊໂລໂມນຊົງສ້າງໄວ້ນັ້ນໄປນຳ.
[10]ກະສັດເຣໂຮໂບອາມຊົງເຮັດໂລ່ທອງເຫລືອງຂຶ້ນແທນ ແລະ ໄດ້ມອບໄວ້ໃນມືຂອງທະຫານຮັກສາພະອົງ, ຜູ້ເຝົ້າປະຕູພະຣາຊະວັງທັງຫລາຍ.
[11]ມັນໄດ້ເກີດຂຶ້ນທີ່ກະສັດສະເດັດເຂົ້າໄປໃນພຣະວິຫານຂອງພຣະຢາເວເມື່ອໃດ, ທະຫານຮັກສາພະອົງກໍມາຖືໂລ່ນັ້ນ;
ແລ້ວນຳກັບໄປເກັບໄວ້ໃນຫ້ອງທະຫານຮັກສາພະອົງຕາມເດີມ.[12]ເມື່ອເຣໂຮໂບອາມຊົງຖ່ອມພະອົງລົງ,
ພຣະພິໂຣດຂອງພຣະຢາເວກໍຫັນໄປຈາກພະອົງ, ບໍ່ໄດ້ທຳລາຍພະອົງຈົນຫມົດສິ້ນ; ຫລາຍກວ່ານັ້ນອີກ, ສະພາບການກໍຍັງດີຢູ່ໃນຢູດາ.
[13]ດັ່ງນັ້ນກະສັດເຣໂຮໂບອາມ ຈຶ່ງສະຖາປະນາພະອົງຂຶ້ນໃນເມືອງເຢຣູຊາເລັມ, ແລະ ຊົງປົກຄອງ. ເຣໂຮໂບອາມຊົງເລີ່ມປົກຄອງນັ້ນ
ເພິ່ນມີອາຍຸສີ່ສິບເອັດປີ, ແລະ ພະອົງຊົງປົກຄອງສິບເຈັດປີໃນເມືອງເຢຣູຊາເລັມ,
ອັນເປັນເມືອງຊຶ່ງພຣະຢາເວຊົງເລືອກໄວ້ຈາກຕະກູນຕ່າງໆຂອງອິສະຣາເອນ ເພື່ອຈະຕັ້ງພຣະນາມຊື່ຂອງພຣະອົງໄວ້ບ່ອນນັ້ນ.
ແມ່ຂອງພະອົງຊົງພະນາມວ່ານາອາມາ, ຄົນອຳໂມນ.[14]ພະອົງໄດ້ຊົງກະທຳການຊົ່ວຮ້າຍ,
ເພາະພະອົງບໍ່ຕັ້ງພະທັຍທີ່ຈະສະແຫວງຫາພຣະຢາເວ.[15]ສ່ວນພະຣາຊະກິດຂອງເຣໂຮໂບອາມ, ຕັ້ງແຕ່ຕົ້ນຈົນສຸດທ້າຍ,
ກໍບໍ່ໄດ້ບັນທຶກໄວ້ໃນຫນັງສືຂອງເຊມາຢາຜູ້ທຳນວາຍ ແລະ ຂອງອິດໂດຜູ້ທຳນວາຍ, ຊຶ່ງໄດ້ບັນທຶກຕາມແບບພົງສາວະດານ ແລະ
ສົງຄາມກັນມາຕະຫລອດລະຫວ່າງ ເຣໂຮໂບອາມ ແລະ ເຢໂຣໂບອາມຫລື?.[16]ເຣໂຮໂບອາມກໍລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ
ພວກເຂົາກໍຝັງພະສົບໄວ້ໃນນະຄອນດາວິດ; ອາບີຢາລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນພະອົງ.

 generated on Tue Jun 17 19:01:42 2025

# 13

1ໃນປີທີສິບແປດແຫ່ງຣາຊະການຂອງກະສັດເຢໂຣໂບອາມ, ອາບີຢາໄດ້ເລີ່ມປົກຄອງເຫນືອປະເທດຢູດາ.
2ພະອົງຊົງປົກຄອງໃນເຢຣູຊາເລັມສາມປີ; ແມ່ຂອງພະອົງມີພະນາມວ່າ ມີກາຢາ, ລູກສາວຂອງອຸຣີເອນແຫ່ງກິເບອາ.
ມີສົງຄາມລະຫວ່າງອາບີຢາ ແລະ ເຢໂຣໂບອາມ.3ອາບີຢາສະເດັດອອກເຮັດສົງຄາມ ກັບກອງທັບທະຫານທີ່ກ້າຫານ, ຊຳນານເສິກ,
ເປັນຄົນຄັດເລືອກແລ້ວ 400,000 ຄົນ. ເຢໂຣໂບອາມໄດ້ຕັ້ງແນວຮົບສູ້ກັບພະອົງດ້ວຍຄົນທີ່ຖືກຄັດເລືອກ ທີ່ກ້າຫານ, ຊຳນານເສິກເປັນທະຫານ
800,000 ຄົນ.

4ອາບີຢາຊົງລຸກຢືນຢູ່ເທິງພູເຂົາເຊມາຣາຢິມ, ຊຶ່ງຢູ່ໃນພູເຂົາເອຟຣາຢິມ, ແລະ ກ່າວວ່າ, “ຂ້າແດ່ເຢໂຣໂບອາມ ແລະອິສະຣາເອນທັງປວງ,
ຂໍຟັງຂ້າພະເຈົ້າ!5ບໍ່ຄວນຫລືທີ່ທ່ານທັງຫລາຍຈະຮູ້ວ່າ ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ພຣະຣາຊະທານຕຳແຫນ່ງກະສັດເຫນືອອິສະຣາເອນເປັນນິດ, ແກ່ດາວິດ ແລະ ລູກຫລານຂອງພະອົງໂດຍຄຳຫມັ້ນສັນຍາຢ່າງເປັນທາງການ.
6ເຖິງປານນັ້ນ ເຢໂຣໂບອາມລູກຊາຍເນບັດ, ຂ້າຣາຊະການຂອງໂຊໂລໂມນລູກຊາຍຂອງດາວິດ, ໄດ້ລຸກຂຶ້ນກະບົດຕໍ່ເຈົ້ານາຍຂອງຕົນ.
7ມີພວກຜູ້ຊາຍໄຮ້ຄ່າ, ຄົນຖ່ອຍຄົນອັນທະພານບາງຄົນມົ້ວສຸມກັນກັບລາວ. ຂານສູ້ກັບເຣໂຣໂບອາມລູກຊາຍຂອງໂຊໂລໂມນ,
ເມື່ອເຣໂຣໂບອາມຍັງນ້ອຍຢູ່ ແລະ ຂາດປະສົບການ ແລະ ໃຈອ່ອນແອຕ້ານທານພວກເຂົາບໍ່ໄຫວ.
8ບັດນີ້ ທ່ານຄິດວ່າຈະຕໍ່ຕ້ານຣາຊະອານາຈັກຂອງພຣະຢາເວທີ່ຢູ່ໃນມືລູກຫລານຂອງດາວິດ. ເພາະທ່ານທັງຫລາຍເປັນຄົນຫມູ່ໃຫຍ່, ແລະ
ມີພະເປັນລູກງົວຄຳທີ່ເຢໂຣໂບອາມສ້າງໄວ້ໃຫ້ທ່ານ.9ທ່ານທັງຫລາຍບໍ່ໄດ້ຂັບໄລ່ປະໂລຫິດຂອງພຣະຢາເວ, ລູກຫລານຂອງອາໂຣນ, ແລະ
ຄົນເລວີອອກໄປຫລື? ພວກເຈົ້າບໍ່ໄດ້ ຕັ້ງປະໂລຫິດສຳລັບຕົນເອງຄືຊົນຊາດທັງຫລາຍຫລື? ຜູ້ໃດທີ່ນຳງົວຫນຸ່ມ ແລະ
ແກະຜູ້ເຈັດໂຕມາຊຳຣະຕົວໃຫ້ບໍຣິສຸດໄວ້ ຈະໄດ້ເປັນປະໂລຫິດຂອງສິ່ງທີ່ບໍ່ແມ່ນພະແທ້.
10ແຕ່ສຳລັບເຮົາທັງຫລາຍ, ພຣະຢາເວຊົງເປັນພຣະເຈົ້າຂອງເຮົາທັງຫລາຍ, ແລະ ເຮົາທັງຫລາຍບໍ່ໄດ້ປະຖິ້ມພຣະອົງ. ເຮົາມີປະໂລຫິດ,
ຜູ້ປົວລະບັດພຣະຢາເວເປັນລູກຫລານຂອງອາໂຣນ, ແລະ ທັງມີຄົນເລວີເຮັດວຽກຫນ້າທີ່ຂອງພວກເຂົາ.
11ພວກເຂົາຖວາຍເຄື່ອງເຜົາບູຊາແດ່ພຣະຢາເວທຸກເຊົ້າທຸກແລງ ທັງເຄື່ອງຫອມ. ພວກເຂົາກຽມທັງເຂົ້າຈີ່ຕໍ່ຫນ້າພຣະພັກເທິງ ໂຕະບໍຣິສຸດ,
ແລະເບິ່ງແຍງຄັນຕະກຽງຄຳ ພ້ອມທັງຕະກຽງ, ເພື່ອໃຫ້ຕະກຽງລຸກຢູ່ທຸກແລງ. ເພາະເຮົາໄດ້ຮັກສາພຣະບັນຊາຂອງພຣະຢາເວ,
ພຣະເຈົ້າຂອງເຮົາ, ແຕ່ທ່ານໄດ້ປະຖິ້ມພຣະອົງເສຍ.
12ແລະເບິ່ງແມ, ພຣະເຈົ້າຊົງຢູ່ກັບເຮົາ ຊົງເປັນຜູ້ບັງຄັບບັນຊາຂອງເຮົາ, ແລະ
ປະໂລຫິດຂອງພຣະອົງກັບແກເສິກພ້ອມທີ່ຈະເປົ່າເອີ້ນເຮັດສົງຄາມຕໍ່ສູ້ກັບທ່ານ. ປະຊາຊົນອິສະຣາເອນເອີຍ, ຂໍຢ່າຕໍ່ສູ້ກັບພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານ, ເພາະທ່ານຈະບໍ່ຊະນະເລີຍ.”
13ແຕ່ເຢໂຣໂບອາມໄດ້ສັບຊ້ອນດັກຊຸ້ມຜູ້ຄົນໄວ້ເພື່ອຈະອ້ອມມາຫາພວກເຂົາ; ຈາກເບື້ອງຫລັງ ດັ່ງນັ້ນ ກອງທະຫານຂອງພະອົງກໍຢູ່ຕໍ່ຫນ້າຢູດາ,
ແລະ ກອງຊຸ້ມກໍຢູ່ຂ້າງຫລັງພວກເຂົາ.14ເມື່ອຢູດາຫລຽວເບິ່ງຫລັງ, ການເສິກກໍຢູ່ຂ້າງຫນ້າ ແລະຂ້າງຫລັງພວກເຂົາ.
ພວກເຂົາທັງຫລາຍກໍຮ້ອງທູນຕໍ່ພຣະຢາເວ, ແລະ ບັນດາປະໂລຫິດກໍເປົ່າແກ.15ແລ້ວຄົນຂອງຢູດາກໍເປັ່ງສຽງຮ້ອງທຳນອງເສິກ;
ແລະເມື່ອຄົນຢູດາຮ້ອງຂຶ້ນ, ຢູ່ມາພຣະເຈົ້າຊົງໃຫ້ເຢໂຣໂບອາມ ແລະ ອິສະຣາເອນທັງປວງພ່າຍແພ້ໄປຕໍ່ອາບີຢາ ແລະ ຢູດາ.
16ຄົນອິສະຣາເອນໄດ້ຫນີໄປຕໍ່ຫນ້າຢູດາ, ແລະ ພຣະເຈົ້າຊົງມອບພວກເຂົາໄວ້ໃນມືຂອງອາບີຢາ.17ອາບີຢາ
ແລະປະຊາຊົນຂອງພະອົງກໍຂ້າພວກເຂົາຢ່າງຫລວງຫລາຍ; ຄົນອິສະຣາເອນທີ່ຄັດເລືອກແລ້ວຈຶ່ງລົ້ມຕາຍ 500,000 ຄົນ.18ນີ້ແຫລະ,
ຄົນອິສະຣາເອນທີ່ຖືກປາບປາມໃນເທື່ອນັ້ນ; ຄົນຢູດາກໍຊະນະ ເພາະພວກເຂົາເພິ່ງພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ.
19ອາບີຢາໄດ້ໄລ່ຕິດຕາມເຢໂຣໂບອາມ; ພະອົງໄດ້ຍຶດເອົາຫົວເມືອງຈາກພະອົງຄື ຄືເມືອງເບັດເອນກັບຫມູ່ບ້ານຂອງເມືອງນັ້ນ,
ເຢຊານາກັບຫມູ່ບ້ານຂອງເມືອງນັ້ນ, ແລະ ເອຟະໂຣນກັບຫມູ່ຂອງເມືອງນັ້ນ.
20ເຢໂຣໂບອາມບໍ່ໄດ້ຟື້ນອຳນາດຂອງພະອົງໃນຣາຊະການຂອງອາບີຢາ; ພຣະຢາເວຊົງປຣະຫານພະອົງໃຫ້ສິ້ນພະຊົນເສຍ.
21ແຕ່ຝ່າຍອາບີຢາກໍມີອຳນາດຫລາຍຂຶ້ນ; ພະອົງຊົງມີມະເຫສີສິບສີ່ອົງ ແລະ ໃຫ້ກຳເນີດລູກຊາຍຊາວສອງອົງ ແລະ ລູກສາວສິບຫົກອົງ.
22ຣາຊະກິດນອກນັ້ນຂອງອາບີຢາ, ວິທີການ, ແລະ ພະດຳຣັດຂອງພະອົງໄດ້ບັນທຶກໄວ້ໃນຫນັງສືຂອງຜູ້ທຳນວາຍອິດໂດ.

# 14

[1]ອາບີຢາຈຶ່ງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ, ແລະ ພວກເຂົາກໍຝັງພະສົບໄວ້ໃນນະຄອນດາວິດ.
ອາຊາລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນພະອົງ. ໃນຣາຊະການຂອງອາຊາແຜ່ນດິນໄດ້ສະຫງົບຢູ່ສິບປີ.[2]ອາຊາຊົງກະທຳສິ່ງທີ່ດີ
ແລະເປັນທີ່ຊອບໃນສາຍພຣະເນດພຣະຢາເວພຣະເຈົ້າຂອງພະອົງ.[3]ພະອົງຊົງກຳຈັດແທ່ນບູຊາພະຕ່າງດ້າວ ແລະ
ປູຊະນີຍະສະຖານສູງທັງຫລາຍ. ມ້າງເສົາສັກສິດລົງ ແລະ ໄດ້ລົ້ມເສົາຮູບເຄົາຣົບເສຍ.[4]ພະອົງໄດ້ຊົງບັນຊາໃຫ້ຢູດາສະແຫວງຫາພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ, ແລະ ໃຫ້ຮັກສາກົດຫມາຍກັບພຣະບັນຍັດ.

[5]ພະອົງຊົງກຳຈັດປູຊະນີຍະສະຖານສູງ ແລະ ແທ່ນເຄື່ອງຫອມອອກໄປຈາກຫົວເມືອງທັງຫມົດຂອງຢູດານຳ.
ຣາຊະອານາຈັກກໍໄດ້ສະຫງົບຢູ່ພາຍໃຕ້ພະອົງ.[6]ພະອົງຊົງສ້າງຫົວເມືອງທີ່ມີປ້ອມໃນຢູດາ, ເພາະແຜ່ນດິນກໍສະຫງົບ, ແລະ
ພະອົງບໍ່ໄດ້ເຮັດສົງຄາມໃນປີເຫລົ່ານັ້ນ, ເພາະພຣະຢາເວຊົງປຣະທານຄວາມສະຫງົບແກ່ພະອົງ.
[7]ເພາະອາຊາກ່າວກັບຢູດາວ່າ, “ໃຫ້ເຮົາທັງຫລາຍສ້າງຫົວເມືອງເຫລົ່ານີ້ ແລະ ອ້ອມດ້ວຍກຳແພງຫໍຄອຍ, ປະຕູເມືອງ ແລະ ດ່ານ;
ແຜ່ນດິນຍັງເປັນຂອງເຮົາ ເພາະເຮົາໄດ້ສະແຫວງຫາພຣະຢາເວພຣະເຈົ້າຂອງເຮົາ. ເຮົາໄດ້ສະແຫວງຫາພຣະອົງ,
ແລະພຣະອົງໄດ້ຊົງປຣະທານຄວາມສະຫງົບສຸກທຸກດ້ານ.” ດັ່ງນັ້ນພວກເຂົາທັງຫລາຍຈຶ່ງສ້າງສາ ແລະ ຈະເຣີນຂຶ້ນ.
[8]ອາຊາຊົງມີກອງທັບດ້ວຍໂລ່ໃຫຍ່ ແລະ ຫອກ; ຈາກຢູດາ 300,000 ຄົນ ແລະ ຈາກເບັນຢາມິນຊົງຖືໂລ່ ແລະ ທະນູ 280,000 ຄົນ.
ທັງຫມົດເປັນທະຫານເອກ.
[9]ເຊຣາຊາວເອທີໂອເປຍໄດ້ອອກມາຕໍ່ສູ້ກັບພວກເຂົາດ້ວຍກອງທັບຫນຶ່ງລ້ານຄົນ ແລະ ລົດຮົບສາມຮ້ອຍຄັນ ແລະ
ພເອົງໄດ້ມາຮອດເມືອງມາເຣຊາ.[10]ແລະອາຊາຊົງຍົກອອກໄປປະທະກັບພວກເຂົາ, ແລະ
ພວກເຂົາທັງຫລາຍກໍຕັ້ງແນວຮົບໃນພູເຂົາເຊຟາທາທີ່ມາເຣຊາ.[11]ອາຊາຮ້ອງທູນຕໍ່ພຣະຢາເວ, ພຣະເຈົ້າຂອງພະອົງວ່າ, “ຂ້າແດ່ພຣະຢາເວ,
ບໍ່ມີຜູ້ໃດຊ່ວຍໄດ້ຢ່າງພຣະອົງ ໃນການສູ້ຮົບກັນລະຫວ່າງຜູ້ທີ່ມີກຳລັງເມື່ອພວກເຂົາກຳລັງປະເຊີນກັບຄົນຫລວງຫລາຍ.
ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້າພະອົງທັງຫລາຍ ຂໍຊົງຊ່ວຍພວກຂ້າພະອົງ, ເພາະຂ້າພະອົງທັງຫລາຍເພິ່ງພຣະອົງ, ແລະ
ຂ້າພະອົງມາຕໍ່ສູ້ກັບຄົນຫມູ່ໃຫຍ່ນີ້ໃນພຣະນາມຂອງພຣະອົງ. ຂ້າແດ່ພຣະຢາເວ, ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງທັງຫລາຍ;
ຂໍຢ່າໃຫ້ມະນຸດຊະນະພຣະອົງ.”
[12]ດັ່ງນັ້ນພຣະຢາເວຈຶ່ງຊົງໃຫ້ຊາວເອທີໂອເປຍພ່າຍແພ້ຕໍ່ອາຊາ ແລະ ຕໍ່ຢູດາ; ຊາວເອທີໂອເປຍກໍຫນີໄປ.[13]ອາຊາ
ແລະທະຫານທີ່ຢູ່ກັບພະອົງກໍໄລ່ຕາມພວກເຂົາໄປເຖິງເມືອງເກຣາ. ຊາວເອທີໂອເປຍລົ້ມ ຕາຍຫລາຍຈົນບໍ່ເຫລືອຈັກຊີວິດດຽວ,
ເພາະພວກເຂົາໄດ້ແຕກພ່າຍຕໍ່ພຣະພັກພຣະຢາເວ ແລະກອງທັບຂອງພຣະອົງ. ຄົນຢູດາເກັບຂອງທີ່ຍຶດໄດ້ຢ່າງຫລວງຫລາຍ.
[14]ພວກເຂົາຍັງໂຈມຕີບັນດາຫົວເມືອງຮອບເມືອງເກຣາ, ເພາະວ່າຄວາມຢ້ານກົວຕໍ່ພຣະຢາເວໄດ້ມາເຖິງພວກເຂົາ.
ພວກເຂົາໄດ້ປຸ້ນຫົວເມືອງທັງຫມົດ, ແລະ ເພາະມີສິ່ງຂອງທີ່ຍຶດໄດ້ໃນນັ້ນຫລາຍ.[15]ພວກເຂົາໄດ້ໂຈມຕີເຕັນຂອງຜູ້ທີ່ມີງົວ;
ພວກເຂົາໄດ້ຢຶດເອົາແກະໄປຢ່າງຫລວງຫລາຍ, ແລະ ອູດດ້ວຍ, ແລ້ວພວກເຂົາກໍກັບໄປເຢຣູຊາເລັມ.

 generated on Tue Jun 17 19:01:42 2025

15 [1]ພຣະວິນຍານຂອງພຣະເຈົ້າສະເດັດມາສະຖິດກັບອາຊາຣີຢາລູກຊາຍໂອເດັດ.[2]ເພິ່ນຈຶ່ງອອກໄປເຝົ້າອາຊາທູນພະອົງວ່າ, "ຂ້າແດ່ອາຊາ
ແລະ ຢູດາ ກັບເບັນຢາມິນທັງປວງ ຂໍຈົ່ງຟັງຂ້າພະເຈົ້າ: ພຣະຢາເວຊົງສະຖິດກັບທ່ານທັງຫລາຍ, ກໍຕໍ່ເມື່ອທ່ານທັງຫລາຍຢູ່ກັບພຣະອົງ.
ຖ້າທ່ານທັງຫລາຍສະແຫວງຫາພຣະອົງ, ທ່ານກໍຈະພົບພຣະອົງ; ແຕ່ຖ້າທ່ານທັງຫລາຍປະຖິ້ມພຣະອົງ, ພຣະອົງຈະຊົງປະຖິ້ມທ່ານທັງຫລາຍ.

[3]ອິສຣາເອນຢູ່ໂດຍປາສະຈາກພຣະເຈົ້າອົງທ່ຽງແທ້ເປັນເວລາດົນ, ບໍ່ມີປະໂລຫິດຜູ້ສັ່ງສອນ, ແລະ ບໍ່ມີກົດຫມາຍ.
[4]ແຕ່ເມື່ອເຖິງຄາວພວກເຂົາທຸກຍາກລຳບາກ ພວກເຂົາຫັນມາຫາພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ແລະ ສະແຫວງຫາພຣະອົງ
ພວກເຂົາທັງຫລາຍກໍພົບພຣະອົງ.[5]ໃນສມັຍນັ້ນບໍ່ມີສັນຕິພາບແກ່ຜູ້ທີ່ອອກໄປ, ຫລືຜູ້ທີ່ເຂົ້າມາ;
ເພາະມີການວຸ້ນວາຍລົບກວນຊາວເມືອງທັງຫລາຍນັ້ນ.
[6]ພວກເຂົາແຕກແຍກກັນເປັນພວກ, ປະຊາຊາດຕໍ່ປະຊາຊາດ, ແລະ ເມືອງຕໍ່ເມືອງ,
ເພາະພຣະເຈົ້າຊົງລົບກວນພວກເຂົາດ້ວຍຄວາມທຸກຍາກລຳບາກ.[7]ແຕ່ທ່ານທັງຫລາຍຈົ່ງກ້າຫານ, ຢ່າໃຫ້ມືຂອງທ່ານອ່ອນລົງ,
ເພາະວ່າກິຈະການຂອງທ່ານຈະໄດ້ຮັບບຳເຫນັດ."
[8]ເມື່ອອາຊາຊົງຮັບຟັງຖ້ອຍຄຳເຫລົ່ານີ້, ຄືຄຳທຳນວາຍຂອງໂອເດັດຜູ້ທຳນວາຍ, ພະອົງກໍຊົງມີພະທັຍກ້າຂຶ້ນ ແລະ
ຊົງກຳຈັດສິ່ງທີ່ຫນ້າກຽດຊັງຈາກແຜ່ນດິນຢູດາ ແລະ ເບັນຢາມິນຈົນຫມົດ, ແລະ ຈາກຫົວເມືອງຊຶ່ງພະອົງຍຶດມາໄດ້ຈາກພູເຂົາເອຟຣາຢິມ,
ແລະ ພະອົງຊົງສ້ອມແປງແທ່ນບູຊາຂອງພຣະຢາເວ, ຊຶ່ງຢູ່ຕໍ່ຫນ້າລະບຽງພຣະວິຫານຂອງພຣະຢາເວ.[9]ພະອົງຊົງຮວບຮວມຢູດາ ແລະ
ເບັນຢາມິນທັງປວງ, ແລະ ຄົນເຫລົ່ານັ້ນຈາກເອຟຣາຢິມ ມານາເຊ ແລະ ຈາກຊີເມໂອນຜູ້ອາສັຍຢູ່ກັບພວກເຂົາທັງຫລາຍ.
ເພາະຄົນເປັນຈຳນວນຫລາຍໄດ້ຫລົບຫນີມາຫາພະອົງຈາກອິສະຣາເອນ,
ເມື່ອພວກເຂົາເຫັນວ່າພຣະຢາເວພຣະເຈົ້າຂອງພະອົງສະຖິດຢູ່ກັບພະອົງ.
[10]ພວກເຂົາຊຸມນຸມກັນທີ່ເຢຣູຊາເລັມໃນເດືອນທີສາມ, ຂອງປີທີສິບຫ້າໃນຣາຊະການຂອງອາຊາ.
[11]ພວກເຂົາຖວາຍສັດບູຊາແດ່ພຣະຢາເວໃນມື້ນັ້ນຈາກເຄື່ອງຂອງທີ່ພວກເຂົາໄດ້ຍຶດມາ: ມີງົວເຖິກເຈັດຮ້ອຍໂຕ ແລະ ແກະເຈັດພັນໂຕ.
[12]ພວກເຂົາກໍເຮັດຄຳຫມັ້ນສັນຍາທີ່ຈະສະແຫວງຫາພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ, ດ້ວຍສຸດຈິດສຸດໃຈຂອງພວກເຂົາ.
[13]ພວກເຂົາໄດ້ຕົກລົງວ່າຫາກຜູ້ໃດທີ່ປະຕິເສດທີ່ຈະສະແຫວງຫາພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ຄວນຈະມີໂທດເຖິງຕາຍ, ບໍ່ວ່ານ້ອຍ
ຫລື ໃຫຍ່, ບໍ່ວ່າຊາຍ ຫລື ຍິງ.
[14]ພວກເຂົາໄດ້ເຮັດຄຳສັນຍາສາບານຕໍ່ພຣະຢາເວດ້ວຍສຽງອັນດັງ, ກັບດ້ວຍສຽງໂຫ່ຮ້ອງ, ແລະ ດ້ວຍສຽງແກ ແລະ ເຂົາສັດ.
[15]ຄົນຢູດາທັງປວງກໍຊົມຊື່ນຍິນດີເພາະຄຳສາບານນັ້ນ, ເພາະພວກເຂົາໄດ້ປະຕິຍານດ້ວຍສຸດໃຈຂອງຕົນ, ແລະ
ໄດ້ສະແຫວງຫາພຣະອົງດ້ວຍສຸດຄວາມປຣາຖນາຂອງຕົນ, ແລະ ພວກເຂົາກໍພົບພຣະອົງ.
ພຣະຢາເວຊົງປຣະທານໃຫ້ພວກເຂົາມີຄວາມສະຫງົບສຸກຮອບດ້ານ.
[16]ເຖິງວ່າມາອາກາແມ່ຂອງກະສັດອາຊາ ພະອົງກໍຊົງຖອດອອກຈາກການເປັນພະມານດາ,
ເພາະພະນາງໄດ້ເຮັດຮູບເຄົາຣົບອັນຫນ້າກຽດຊັງໃນເສົາຮູບເຄົາຣົບ. ອາຊາຊົງທຳລາຍຮູບເຄົາຣົບຂອງພະນາງລົງ, ແລະບົດ
ແລ້ວເຜົາເສຍທີ່ຫ້ວຍນ້ຳກິດໂຣນ.[17]ແຕ່ສະຖານສູງຕ່າງໆຍັງບໍ່ໄດ້ຖືກຮື້ອອກຫມົດຈາກອິສະຣາເອນ. ຢ່າງໃດກໍດີ
ພະທັຍຂອງອາຊາກໍບໍຣິສຸດຕະຫລອດຣາຊະການຂອງພະອົງ.[18]ພະອົງຊົງນຳເຄື່ອງອຸທິດຖວາຍຂອງຜູ້ເປັນພຣະຣາຊະບິດາ ແລະ
ລວມທັງເຄື່ອງທີ່ພະອົງເອງຊົງອຸທິດຖວາຍ ມີເງິນ ແລະ ຄຳ ແລະເຄື່ອງໃຊ້ເຂົ້າໄປໃນພຣະວິຫານຂອງພຣະຢາເວ.
[19]ບໍ່ມີສົງຄາມອີກຈົນປີທີສາມສິບຫ້າໃນຣາຊະການຂອງອາຊາ.

 generated on Tue Jun 17 19:01:42 2025

16 [1]ໃນປີທີສາມສິບຫົກແຫ່ງຣາຊະການອາຊາ, ບາອາຊາ, ກະສັດແຫ່ງອິສະຣາເອນ, ຂຶ້ນມາຕໍ່ສູ້ກັບຢູດາ ແລະ ໄດ້ສ້າງເມືອງຣາມາ,
ເພື່ອວ່າພະອົງຈະບໍ່ຊົງໃຫ້ຄົນຫນຶ່ງຄົນໃດອອກໄປ ຫລືເຂົ້າມາຫາແຜ່ນດິນຂອງອາຊາ, ກະສັດຂອງຢູດາ.

[2]ແລ້ວອາຊາຊົງເອົາເງິນ ແລະ ຄຳຈາກຄັງຂອງພຣະວິຫານຂອງພຣະຢາເວ ແລະ ຈາກລາຊະສຳນັກ, ແລະ
ສົ່ງໄປໃຫ້ເບັນຮາດັດກະສັດແຫ່ງອາລາມຜູ້ປະທັບໃນເມືອງດາມາເຊ. ໄດ້ກ່າວວ່າ, [3]“ຂໍໃຫ້ມີຄວາມສຳພັນລະຫວ່າງຂ້າພະເຈົ້າ ແລະພະອົງ,
ດັ່ງທີ່ມີຢູ່ກັບບິດາຂອງຂ້າພະເຈົ້າ ແລະ ບິດາຂອງພະອົງ. ເບິ່ງແມ, ຂ້າພະເຈົ້າໄດ້ສົ່ງເງິນ ແລະ ຄຳມາໃຫ້ພະອົງ.
ຂໍສະເດັດໄປທຳລາຍສັນຍາຂອງພະອົງທີ່ມີກັບບາອາຊາ, ກະສັດແຫ່ງອິສະຣາເອນ, ເພື່ອພວກເຂົາຈະຖອຍທັບໄປຈາກຂ້າພະເຈົ້າ.”
[4]ເບັນຮາດັດຊົງເຊື່ອຟັງກະສັດອາຊາ ແລະ ສົ່ງຜູ້ບັງຄັບບັນຊາກອງທັບຂອງພະອົງໄປຕໍ່ສູ້ກັບຫົວເມືອງຂອງອິສະຣາເອນ.
ພວກເຂົາທັງຫລາຍໂຈມຕີເມືອງອີໂຢນ, ດານ, ອາເບັນມາຢິມ, ແລະ ຫົວເມືອງຄັງຫລວງທັງຫມົດຂອງນັບທາລີ.
[5]ຕໍ່ມາເມື່ອບາອາຊາຊົງໄດ້ຍິນເລື່ອງນັ້ນ, ພະອົງຊົງຢຸດສ້າງເມືອງຣາມາ, ແລະ ໃຫ້ພະຣາຊະກິດຂອງພະອົງຢຸດຊະງັກ.
[6]ແລ້ວກະສັດອາຊາຊົງນຳຢູດາທັງຫມົດ. ພວກເຂົາທັງຫລາຍຂົນຫີນຂອງເມືອງຣາມາ ແລະ ເຄື່ອງໄມ້ຂອງເມືອງນັ້ນ ຊຶ່ງບາອາຊາໃຊ້ສ້າງ.
ແລ້ວກະສັດອາຊາໄດ້ຊົງໃຊ້ສິ່ງກໍ່ສ້າງນັ້ນເອົາມາສ້າງເມືອງເກບາ ແລະ ເມືອງມິດຊະປາ.
[7]ເວລານັ້ນຮານານີຜູ້ທຳນວາຍໄດ້ມາເຝົ້າອາຊາ, ກະສັດຂອງຢູດາ, ແລະ ທູນພະອົງວ່າ, “ເພາະທ່ານເພິ່ງກະສັດຂອງຊີເຣຍ,
ໂດຍບໍ່ໄດ້ເພິ່ງພຣະຢາເວພຣະເຈົ້າຂອງທ່ານ, ເພາະສະນັ້ນ ກອງທັບຂອງກະສັດຊີເຣຍຈຶ່ງໄດ້ຫລຸດພົ້ນມືທ່ານໄປ. [8]ຄົນເອທີໂອເປຍ ແລະ
ຊາວລີເບຍບໍ່ແມ່ນກອງທັບໃຫຍ່, ທີ່ມີຣົດຮົບ ແລະ ທະຫານມ້າຢ່າງຫລວງຫລາຍຫລື? ແຕ່ເພາະທ່ານເພິ່ງພຣະຢາເວ,
ພຣະອົງຈະຊົງມອບພວກເຂົາທັງຫລາຍໄວ້ໃນມືຂອງທ່ານ.
[9]ເພາະວ່າພຣະເນດຂອງພຣະຢາເວກໍຢູ່ເຫນືອແຜ່ນດິນໂລກທັງຫມົດ,
ເພື່ອສະແດງຣິດທານຸພາບຂອງພຣະອົງໂດຍເຫັນແກ່ຜູ້ທີ່ມີໃຈຈິງຕໍ່ພຣະອົງ. ໃນເລື່ອງນີ້ທ່ານໄດ້ເຮັດຢ່າງໂງ່ຈ້າ.
ເພາະຕັ້ງແຕ່ນີ້ໄປທ່ານຈະມີການເສິກສົງຄາມ.” [10]ຝ່າຍອາຊາກໍຊົງຮ້າຍຕໍ່ຜູ້ທຳນວາຍນັ້ນ; ແລະພະອົງຈັບລາວຂັງໄວ້ໃນຄຸກ,
ເພາະພະອົງຊົງຮ້າຍຫລາຍແກ່ລາວໃນເລື່ອງນີ້. ໃນເວລາດຽວກັນ, ອາຊາຍັງໄດ້ຊົງຂົ່ມເຫັງປະຊາຊົນບາງຄົນດ້ວຍ.
[11]ເບິ່ງແມ, ພະຣາຊະກິດຂອງອາຊາ, ຕັ້ງແຕ່ຕົ້ນຈົນສຸດທ້າຍ, ໄດ້ບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງຢູດາ ແລະອິສະຣາເອນ.
[12]ໃນປີທີສາມສິບເກົ້າແຫ່ງຣາຊະການຂອງພະອົງ, ອາຊາຊົງເປັນພະຍາດທີ່ພະບາດຂອງພະອົງ; ພະຍາດຂອງພະອົງກໍຮ້າຍແຮງຫລາຍ.
ແມ່ນວ່າ, ເປັນພະຍາດຢູ່ພະອົງກໍບໍ່ໄດ້ຊົງສະແຫວງຫາພຣະຢາເວ, ແຕ່ໄດ້ສະແຫວງຫາຄວາມຊ່ວຍເຫລືອຈາກແພດຫມໍ.
[13]ອາຊາຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ; ພະອົງສິ້ນພະຊົນໃນປີທີສີ່ສິບເອັດແຫ່ງຣາຊະການຂອງພະອົງ.
[14]ພວກເຂົາຝັງພະສົບໄວ້ໃນຂຸມຝັງສົບຂອງພະອົງ, ຊຶ່ງພະອົງໄດ້ສະກັດໄວ້ແລ້ວໃນນະຄອນດາວິດ.
ພວກເຂົາວາງພະສົບຂອງພະອົງໄວ້ເທິງແທ່ນທີ່ມີເຄື່ອງຫອມຕ່າງໆເຕັມໄປຫມົດ ຊຶ່ງຊ່າງປຸງເຄື່ອງຫອມໄດ້ປຸງໄວ້.
ແລະເຂົາທັງຫລາຍໄດ້ກໍແປວໄຟໃຫຍ່ຖວາຍພະອົງ.

17 1ເຢໂຮຊາຟັດລູກຊາຍຂອງພະອົງຂຶ້ນປົກຄອງແທນພະອົງ. ເຢໂຮຊາຟັດໄດ້ຊົງເສີມກຳລັງທະຫານຕໍ່ສູ້ອິສະຣາເອນ.
2ພະອົງຊົງວາງກຳລັງທະຫານໄວ້ໃນຫົວເມືອງທີ່ມີປ້ອມທັງປວງຂອງຢູດາ, ແລະ ຊົງຕັ້ງທະຫານປະຈຳປ້ອມໃນແຜ່ນດິນຢູດາ ແລະ
ໃນຫົວເມືອງເອຟຣາຢິມ, ຊຶ່ງອາຊາບິດາຂອງພະອົງໄດ້ຍຶດໄວ້.

3ພຣະຢາເວຊົງສະຖິດກັບເຢໂຮຊາຟັດ ເພາະພະອົງຊົງດຳເນີນໃນທາງຂອງດາວິດ ບິດາຂອງພະອົງ, ແລະ
ພະອົງບໍ່ໄດ້ຊົງສະແຫວງຫາບັນດາພະບາອານ.4ແຕ່ພະອົງໄດ້ສະແຫວງຫາພຣະຢາເວພຣະເຈົ້າຂອງບິດາພະອົງ, ແລະ
ດຳເນີນໃນພຣະບັນຍັດຂອງພຣະອົງ, ບໍ່ໄດ້ຊົງດຳເນີນຕາມອິສະຣາເອນເລີຍ.
5ເພາະສະນັ້ນ ພຣະຢາເວຊົງສະຖາປະນາຣາຊະອານາຈັກໄວ້ໃນພະຫັດຂອງພະອົງ, ແລະ
ທັງຢູດາກໍນຳເຄື່ອງບັນນາການມາຖວາຍເຢໂຮຊາຟັດ. ພະອົງຈຶ່ງຮັ່ງມີຢ່າງຫລວງຫລາຍ ແລະ ມີກຽຕ.
6ພະທັຍຂອງພະອົງເຂັ້ມແຂງຂຶ້ນໃນເສັ້ນທາງຂອງພຣະຢາເວ. ພະອົງຈຶ່ງຊົງກຳຈັດປູຊະນີຍະສະຖານສູງ ແລະ
ບັນດາເສົາຮູບເຄົາຣົບໄປຈາກຢູດາ.
7ໃນປີທີສາມແຫ່ງຣາຊະການຂອງພະອົງ ພະອົງຊົງໃຊ້ເຈົ້ານາຍຂອງພະອົງຄື ເບັນຮາຍ, ໂອບາດີຢາ, ເຊຄາຣີຢາ, ເນທາເນນ ແລະ ມີກາຢາ,
ໄປສັ່ງສອນໃນຫົວເມືອງຂອງຢູດາ.8ມີຄົນເລວີໄປກັບພວກເຂົາດ້ວຍຄື ເຊມາຢາ, ເນທານີອາ, ເຊບາດີຢາ, ອາສາເຮນ, ເຊມີຣາໂມດ,
ເຢໂຮນາທານ, ອາໂດນີຢາ, ແລະ ໂຕບີຢາ; ແລະ ໂຕບອາໂດນີຢາ ຄົນເລວີ ພ້ອມກັບຄົນເຫລົ່ານີ້ມີ ເອລີຊາມາ ແລະ ເຢໂຮຣາມ
ຜູ້ເປັນປະໂລຫິດ.9ພວກເຂົາທັງຫລາຍໄດ້ສັ່ງສອນໃນຢູດາ, ມີຫນັງສືພຣະບັນຍັດຂອງພຣະຢາເວໄປກັບພວກເຂົາດ້ວຍ.
ພວກເຂົາທ່ຽວໄປທົ່ວຫົວເມືອງທັງຫມົດແຫ່ງຢູດາ ແລະ ໄດ້ສັ່ງສອນທ່າມກາງປະຊາຊົນ.
10ຄວາມຢ້ານກົວອັນມາຈາກພຣະຢາເວຕົກຢູ່ເຫນືອບັນດາຣາຊະອານາຈັກແຫ່ງແຜ່ນດິນຕ່າງໆທີ່ຢູ່ຮອບຢູດາ, ແລະ
ພວກເຂົາບໍ່ໄດ້ເຮັດສົງຄາມກັບເຢໂຮຊາຟັດ.11ຄົນຟີລິສະຕິນບາງພວກໄດ້ນຳເອົາຂອງຂວັນມາຖວາຍເຢໂຮຊາຟັດ, ແລະ
ນຳເງິນມາເປັນບັນນາການ. ພວກອາຫລັບໄດ້ນຳຝູງແບ້ແກະ ຄືແກະຜູ້ 7,700 ໂຕ, ແລະ ແບ້ຜູ້ 7,700 ໂຕມາຖວາຍພະອົງ.
12ເຢໂຮຊາຟັດຊົງຈະເລີນຍິ່ງໃຫຍ່ຂຶ້ນເປັນລຳດັບ. ພະອົງຊົງສ້າງປ້ອມ ແລະ ຫົວເມືອງຄັງຫລວງໄວ້ໃນຢູດາ.
13ພະອົງຊົງມີພະຣາຊະກິດຫລວງຫລາຍໃນຫົວເມືອງຂອງຢູດາ, ແລະ ພະອົງຊົງມີທະຫານຜູ້ເກັ່ງກ້າໃນເມືອງເຢຣູຊາເລັມ.
14ຕໍ່ໄປນີ້ເປັນຈຳນວນຕາມເຮືອນບັນພະບຸຣຸດຂອງພວກເຂົາຄື ຂອງຢູດາ, ຜູ້ບັງຄັບບັນຊາກອງພັນມີ ອັດນາຜູ້ບັງຄັບບັນຊາ, ພ້ອມກັບທະຫານ
300,000 ຄົນ;15ຖັດລາວໄປຄື ເຢໂຮຮານັນ ຜູ້ບັງຄັບບັນຊາ, ແລະ ພ້ອມກັບ 280,00 ຄົນ;16ຖັດຈາກອາມາສີຢາ ລູກຊາຍຊິກຣີ,
ເປັນຄົນອາສາສະຫມັກເພື່ອການບົວລະບັດພຣະຢາເວ; ແລະ ພ້ອມກັບທະຫານສອງແສນຄົນ.17ຈາກເຜົ່າເບັນຢາມິນຄື
ເອລີອາດາທະຫານທີ່ເກັ່ງ, ກັບຄົນ 200,000 ຄົນພ້ອມດ້ວຍທະນູ ແລະ ໂລ່;18ຖັດລາວໄປຄື ເຢໂຮຊາບັດ, ແລະ ພ້ອມກັບຄົນຕິດອາວຸດ
180,000 ຄົນ.19ເຫລົ່ານີ້ເປັນຂ້າຣາຊະການຂອງກະສັດ, ນອກເຫນືອຈາກຜູ້ທີ່ກະສັດຊົງວາງໄວ້ໃນຫົວເມືອງທີ່ມີປ້ອມທົ່ວແຜ່ນດິນຢູດາ.

 generated on Tue Jun 17 19:01:42 2025

18 [1]ບັດນີ້, ຝ່າຍເຢໂຮຊາຟັດຊົງຮັ່ງມີ ແລະ ມີກຽດຍິ່ງໃຫຍ່;
ພະອົງໄດ້ຊົງກະທຳໃຫ້ພະອົງເອງເປັນທອງແຜ່ນດຽວກັນກັບອາຮາບດ້ວຍການໃຫ້ລູກຊາຍອົງໜຶ່ງຂອງພະອົງແຕ່ງງານກັບລູກສາວຂອງອາຮາບ.
[2]ຄັນລ່ວງມາຫລາຍປີ, ພະອົງສະເດັດລົງໄປຢາມອາຮາບໃນຊາມາເຣຍ. ອາຮາບຊົງຂ້າແກະ ແລະ ງົວຫລາຍໂຕສຳລັບພະອົງ ແລະ
ສຳລັບທະຫານທີ່ມາກັບພະອົງ. ອາຮາບຊົງຊັກຊວນພະອົງໃຫ້ຂຶ້ນໄປຕໍ່ສູ້ກັບຣາໂມດກິເລອາດ.[3]ອາຮາບ, ກະສັດແຫ່ງອິສະຣາເອນ,
ກ່າວກັບເຢໂຮຊາຟັດ, ກະສັດແຫ່ງຢູດາວ່າ, "ທ່ານຈະໄປກັບຂ້າພະເຈົ້າທີ່ຣາໂມດກິເລອາດຫລືບໍ່?" ພະອົງທູນຕອບກະສັດອາຮາບວ່າ,
"ຂ້າພະເຈົ້າກໍເປັນຄືກັບທີ່ທ່ານເປັນ, ແລະ ປະຊາຊົນຂອງຂ້າພະເຈົ້າກໍເປັນດັ່ງປະຊາຊົນຂອງທ່ານ; ເຮົາຈະຢູ່ກັບທ່ານໃນສົງຄາມນັ້ນ."

[4]ເຢໂຮຊາຟັດກ່າວກັບກະສັດແຫ່ງອິສະຣາເອນວ່າ,
"ຂໍສອບຖາມເບິ່ງພຣະຄຳຈາກພຣະຢາເວນີ້ກ່ອນ."[5]ແລ້ວກະສັດແຫ່ງອິສະຣາເອນກໍເອີ້ນປະຊຸມພວກຜູ້ທຳນວາຍ, ປະມານສີ່ຮ້ອຍຄົນ, ແລະ
ກ່າວກັບພວກເຂົາວ່າ, "ຄວນທີ່ເຮົາຈະໄປຕີຣາໂມດກິເລອາດຫລືບໍ່ ຫລື ເຮົາບໍ່ຄວນໄປ?" ພວກເຂົາທັງຫລາຍທູນຕອບວ່າ,
"ຂໍເຊີນສະເດັດຂຶ້ນໄປໂລດ, ເພາະພຣະເຈົ້າຈະຊົງມອບໄວ້ໃນພະຫັດຂອງກະສັດ."
[6]ແຕ່ເຢໂຮຊາຟັດທູນວ່າ, "ບ່ອນນີ້ບໍ່ມີຜູ້ທຳນວາຍຂອງພຣະຢາເວຈັກຄົນໜຶ່ງເລີຍບໍ
ຊຶ່ງເຮົາຈະສອບຖາມໄດ້?"[7]ກະສັດແຫ່ງອິສະຣາເອນທູນເຢໂຮຊາຟັດວ່າ, "ຍັງມີຊາຍອີກຄົນໜຶ່ງ ຊຶ່ງເຮົາຈະໃຫ້ທູນຖາມພຣະຢາເວໄດ້,
ຄືມີຄາຢາລູກຊາຍຂອງອິມລາ, ແຕ່ຂ້າພະເຈົ້າຊັງລາວ ເພາະລາວທຳນວາຍແຕ່ຄວາມຮ້າຍສະເໝີ
ບໍ່ເຄີຍບອກຄວາມດີກ່ຽວກັບຂ້າພະເຈົ້າເລີຍ." ຝ່າຍເຢໂຮຊາຟັດທູນວ່າ,
"ຂໍກະສັດຢ່າກ່າວດັ່ງນັ້ນເລີຍ."[8]ແລ້ວກະສັດແຫ່ງອິສະຣາເອນຈຶ່ງເອີ້ນຂ້າຣາຊະການປະຈຳວັງຄົນໜຶ່ງເຂົ້າມາ ແລະ ກ່າວສັ່ງວ່າ,
"ໄປພາມີກາຢາລູກຊາຍອິມລາມາໄວ."
[9]ບັດນີ້ຝ່າຍກະສັດແຫ່ງອິສະຣາເອນ ແລະ ເຢໂຮຊາຟັດກະສັດແຫ່ງຢູດາ ຕ່າງປຣະທັບເທິງພະທີ່ນັ່ງ, ຊົງນຸ່ງເຄື່ອງປະຈຳຕຳແໜ່ງຂອງພະອົງ,
ໃນບ່ອນວ່າງຊື່ທາງເຂົ້າປະຕູເມືອງຊາມາເຣຍ, ແລະ ຜູ້ທຳນວາຍທັງປວງກໍພວມທຳນວາຍຖວາຍເພິ່ນຢູ່.[10]ແລ້ວເຊເດກີຢາລູກຊາຍເຄນາອານາ
ຈຶ່ງເອົາເຫລັກເຮັດເປັນເຂົາ ແລະ ເວົ້າວ່າ, "ພຣະຢາເວກ່າວດັ່ງນີ້ວ່າ 'ດ້ວຍສິ່ງເຫລົ່ານີ້
ເຈົ້າຈະຊຸກຄົນຊີເຣຍໄປຈົນພວກເຂົາຖືກທຳລາຍໝົດ.'"[11]ບັນດາຜູ້ທຳນວາຍກໍທຳນວາຍຢ່າງດຽວກັນນັ້ນ, ທູນວ່າ,
"ຂໍສະເດັດຂຶ້ນໄປຣາໂມດກິເລອາດເຖີດ ແລະ ຈະມີຊັຍຊະນະ, ເພາະພຣະຢາເວຈະຊົງມອບເມືອງນັ້ນໄວ້ໃນພະຫັດຂອງກະສັດ."
[12]ຜູ້ສົ່ງຂ່າວທີ່ໄປຫາມີກາຢາໄດ້ບອກເພິ່ນ, ກ່າວວ່າ, "ເບິ່ງແມ, ຖ້ອຍຄຳຂອງບັນດາຜູ້ທຳນວາຍກໍເວົ້າສິ່ງທີ່ດີແກ່ກະສັດເປັນປາກດຽວກັນ.
ຂໍໃຫ້ຖ້ອຍຄຳຂອງທ່ານເປັນເໝືອນຖ້ອຍຄຳຂອງຄົນໜຶ່ງໃນພວກນັ້ນ ແລະ ເວົ້າແຕ່ສິ່ງທີ່ດີ."[13]ແຕ່ມີກາຢາຕອບວ່າ,
"ພຣະຢາເວຊົງພຣະຊົນຢູ່ສັນໃດ, ພຣະເຈົ້າຂອງຂ້າພະເຈົ້າກ່າວວ່າຢ່າງໃດ ຂ້າພະເຈົ້າຈະເວົ້າຢ່າງນັ້ນ."[14]ເມື່ອເພິ່ນມາເຝົ້າກະສັດ,
ກະສັດກ່າວຖາມເພິ່ນວ່າ, "ມີກາຢາ, ຄວນທີ່ເຮົາຈະໄປຕີຣາໂມດກິເລອາດບໍ່ ຫລື ເຮົາບໍ່ຄວນໄປ?" ເພິ່ນທູນຕອບພະອົງວ່າ,
"ຂໍເຊີນສະເດັດຂຶ້ນໄປ ແລະ ຈະມີຊັຍຊະນະ! ພວກເຂົາທັງຫລາຍຈະຖືກມອບໄວ້ໃນພະຫັດຂອງພະອົງ."
[15]" ແຕ່ກະສັດກ່າວກັບເພິ່ນວ່າ, "ເຮົາໄດ້ໃຫ້ເຈົ້າປະຕິຍານຈັກເທື່ອແລ້ວວ່າ
ເຈົ້າຈະເວົ້າກັບເຮົາແຕ່ຄວາມຈິງໃນພຣະນາມຊື່ຂອງພຣະຢາເວ?"[16]ດັ່ງນັ້ນມີຄາຢາຈຶ່ງທູນວ່າ,
"ຂ້າພະອົງໄດ້ເຫັນຄົນອິສະຣາເອນທັງປວງກະຈັດກະຈາຍຢູ່ເທິງພູເຂົາ, ເປັນເໝືອນແກະທີ່ບໍ່ມີຜູ້ລ້ຽງ, ແລະ ພຣະຢາເວາກ່າວວ່າ,
'ຄົນເຫລົ່ານີ້ບໍ່ມີເຈົ້ານາຍ. ໃຫ້ເຂົາກັບເມືອເຮືອນຂອງຕົນໂດຍສະຫວັດດີພາບສາ.'"
[17]ດັ່ງນັ້ນກະສັດແຫ່ງອິສະຣາເອນຈຶ່ງທູນເຢໂຮຊາຟັດວ່າ, "ຂ້າພະເຈົ້າໄດ້ບອກທ່ານແລ້ວບໍ່ແມ່ນຫລືວ່າ
ລາວຈະບໍ່ທຳນວາຍສິ່ງດີກ່ຽວກັບຂ້າພະເຈົ້າເລີຍ, ມີແຕ່ສິ່ງຊົ່ວຮ້າຍຕ່າງຫາກ?"[18]ແລ້ວມີກາຢາທູນວ່າ "ສະນັ້ນ
ຂໍຮັບຟັງພຣະທັມຂອງພຣະຢາເວ: ຂ້າພະອົງໄດ້ເຫັນພຣະຢາເວປະທັບເທິງພຣະທີ່ນັ່ງຂອງພຣະອົງ, ແລະ
ບັນດາບໍລິວານແຫ່ງຟ້າສະຫວັນຢືນຢູ່ຂ້າງຂວາພຣະຫັດ ແລະ ຂ້າງຊ້າຍ.
[19]ພຣະຢາເວາກ່າວວ່າ, 'ຜູ້ໃດຈະຫລອກລວງອາຮາບ, ກະສັດແຫ່ງອິສະຣາເອນ, ເພື່ອພວກເຂົາຈະຂຶ້ນໄປ ແລະ ລົ້ມລົງທີ່ຣາໂມດກິເລອາດ?'
ບາງຄົນກໍທູນຢ່າງນີ້ ບາງຄົນກໍທູນຢ່າງນັ້ນ.
[20]ແລ້ວມີວິນຍານດວງໜຶ່ງມາເຝົ້າຕໍ່ພຣະພັກພຣະຢາເວ ແລະ ທູນວ່າ, 'ຂ້າພະອົງຈະຫລອກລວງພວກເຂົາເອງ.'
ພຣະຢາເວກ່າວກັບວິນຍານນັ້ນວ່າ, 'ຈະເຮັດຢ່າງໃດ?'[21]ຝ່າຍວິນຍານນັ້ນກໍທູນວ່າ, 'ຂ້າພະອົງຈະອອກໄປ ແລະ
ຈະເປັນວິນຍານຂີ້ຕົວະຢູ່ໃນປາກຂອງຜູ້ທຳນວາຍຂອງພວກເຂົາທຸກຄົນ.' ພຣະຢາເວກ່າວວ່າ, 'ເຈົ້າໄປຫລອກລວງພວກເຂົາໄດ້, ແລະ
ເຈົ້າຈະເຮັດໄດ້ສຳເລັດ. ຈົ່ງໄປເຮັດເຊັ່ນນັ້ນສາ.'
[22]ບັດນີ້ ເບິ່ງແມ, ພຣະຢາເວຊົງໃສ່ວິນຍານຂີ້ຕົວະໃນປາກຂອງພວກຜູ້ທຳນວາຍຂອງພະອົງ, ແລະ
ພຣະຢາເວຊົງລັ່ນພຣະຄຳເວົ້າເປັນຄວາມຮ້າຍກ່ຽວກັບພະອົງ."
[23]ແລ້ວເຊເດກີຢາລູກຊາຍເຄນາອານາ, ໄດ້ເຂົ້າມາໃກ້, ແລະຕົບແກ້ມມີກາຢາ, ແລະ ເວົ້າວ່າ,
"ພຣະວິນຍານຂອງພຣະຢາເວອອກຈາກຂ້ອຍເວົ້າກັບເຈົ້າໄດ້ຢ່າງໃດ?"[24]ຝ່າຍມີກາຢາຕອບວ່າ, "ເບິ່ງແມ, ເຈົ້າຈະເຫັນໃນມື້ນັ້ນ,
ເມື່ອເຈົ້າເຂົ້າໄປໃນຫ້ອງຊັ້ນໃນ ເພິ່ນຈະເຊື່ອງຕົວເຈົ້າໄວ້."
[25]ກະສັດແຫ່ງອິສະຣາເອນກ່າວວ່າ, "ຈົ່ງຈັບມີກາຢາ ພາລາວກັບໄປມອບໃຫ້ອາໂມນ, ຜູ້ວ່າຣາຊະການເມືອງ, ແລະ ແກ່ໂຢອາດລູກຊາຍ.
[26]ພວກເຈົ້າຈົ່ງບອກວ່າ, 'ກະສັດກ່າວດັ່ງນີ້ວ່າ ເອົາຄົນນີ້ໄປຂັງຄຸກເສຍ ໃຫ້ອາຫານແຫ່ງຄວາມທຸກກັບນ້ຳແຫ່ງຄວາມທຸກ,
ຈົນກວ່າເຮົາຈະກັບມາໂດຍສະຫວັດດີພາບ.'"[27]ແລະມີກາຢາທູນວ່າ "ຖ້າພະອົງສະເດັດກັບມາໂດຍສະຫວັດດີພາບ,
ພຣະຢາເວກໍບໍ່ໄດ້ກ່າວໂດຍຂ້າພະອົງ." ແລະເພິ່ນກ່າວຕໍ່ອີກວ່າ, "ບັນດາຊົນຊາດທັງຫລາຍເອີຍ ຂໍຈົ່ງຟັງເຖີດ."
[28]ດັ່ງນັ້ນອາຮັບ, ກະສັດແຫ່ງອິສະຣາເອນ, ກັບເຢໂຮຊາຟັດ, ກະສັດແຫ່ງຢູດາ, ຈຶ່ງສະເດັດຂຶ້ນໄປຣາໂມດກິເລອາດ.
[29]ກະສັດແຫ່ງອິສະຣາເອນກ່າວກັບເຢໂຮຊາຟັດວ່າ, "ຂ້າພະເຈົ້າຈະປອມຕົວເຂົ້າໄປເຮັດເສິກ ແຕ່ທ່ານຈົ່ງສວມເຄື່ອງຊົງຂອງທ່ານ."

ດັ່ງນັ້ນກະສັດແຫ່ງອິສະຣາເອນກໍຊົງປອມພະອົງ, ແລ້ວທັງສອງພະອົງກໍເຂົ້າເຮັດສົງຄາມ.
[30]ຝ່າຍກະສັດປະເທດຊີເຣຍຊົງບັນຊາບັນດາຜູ້ບັນຊາການຣົດຮົບຂອງພະອົງ, ກ່າວວ່າ, “ຢ່າຮົບກັບທະຫານນ້ອຍ ຫລືໃຫຍ່.
ແຕ່ມຸ້ງໂຈມຕີສະເພາະກະສັດແຫ່ງອິສະຣາເອນ.”
[31]ແລະຢູ່ມາເມື່ອຜູ້ບັນຊາການຣົດຮົບແລເຫັນເຢໂຮຊາຟັດ ພວກເຂົາທັງຫລາຍກໍເວົ້າວ່າ, “ນັ້ນເປັນກະສັດອິສະຣາເອນແລ້ວ.”
ພວກເຂົາຈຶ່ງຫັນເຂົ້າໄປຈະສູ້ຮົບກັບພະອົງ, ແຕ່ເຢໂຮຊາຟັດຊົງຮ້ອງຂຶ້ນ, ແລະ ພຣະຢາເວຈຶ່ງຊົງຊ່ວຍພະອົງ.
ພຣະເຈົ້າຊົງໃຫ້ພວກເຂົາທັງຫລາຍອອກໄປຈາກພະອົງ.[32]ແລະຢູ່ມາເມື່ອຜູ້ບັນຊາການຣົດຮົບເຫັນວ່າບໍ່ແມ່ນກະສັດອິສະຣາເອນ,
ພວກເຂົາກໍຫັນຣົດກັບຈາກການໄລ່ຕາມພະອົງ.
[33]ແຕ່ມີຊາຍຄົນຫນຶ່ງຍິງທະນູໄປ ແລະ ຖືກກະສັດແຫ່ງອິສະຣາເອນເຂົ້າລະຫວ່າງເກັດເກາະແຜ່ນບັງພະອຸລະ.
ພະອົງຈຶ່ງຮັບສັ່ງກັບຄົນຂັບຣົດວ່າ, “ຖອຍຫລັງກັບສາ ແລະ ພາເຮົາອອກຈາກການຮົບ,
ເພາະເຮົາບາດເຈັບແລ້ວ.”[34]ມື້ນັ້ນການຮົບກໍດຸເດືອດຂຶ້ນ, ແລະ ກະສັດອິສະຣາເອນກໍດຶງພະອົງເອງຂຶ້ນໄປໃນຣົດຮົບຂອງພະອົງ
ຫັນພະພັກເຂົ້າສູ້ຄົນຊີເຣຍຈົນຮອດຕອນແລງ. ແລ້ວປະມານເວລາຕາເວັນຕົກ, ພະອົງກໍສິ້ນພະຊົນ.


generated on Tue Jun 17 19:01:42 2025

# 19

[1]ເຢໂຮຊາຟັດກະສັດແຫ່ງຢູດາສະເດັດກັບໄປໂດຍສະຫວັດດີພາບເຖິງພະຣາຊະວັງຂອງພະອົງໃນເມືອງເຢຣູຊາເລັມ.[2]ແຕ່ເຢຮູລູກຊາຍຮານານີ,
ຜູ້ທຳນວາຍ, ໄດ້ອອກໄປເຝົ້າພະອົງ ທູນກະສັດເຢໂຮຊາຟັດວ່າ, “ຄວນທີ່ພະອົງ ຈະຊ່ວຍຄົນອະທັມ? ແລະຮັກຜູ້ທີ່ກຽດຊັງພຣະຢາເວຫລື?
ເພາະເລື່ອງນີ້, ພຣະພິໂຣດຂອງພຣະຢາເວໄດ້ອອກມາເຖິງພະອົງ.[3]ຢ່າງໃດກໍດີ, ພຣະເຈົ້າຍັງພົບຄວາມດີໃນພະອົງຢູ່ຄື
ທີ່ໄດ້ຊົງທຳລາຍບັນດາເສົາອາເຊລາເສຍຈາກແຜ່ນດິນ ແລະ ໄດ້ຕັ້ງພະທັຍສະແຫວງຫາພຣະເຈົ້າ.”

[4]ເຢໂຮຊາຟັດປຣະທັບຢູ່ທີ່ເຢຣູຊາເລັມ, ແລະ ພະອົງຊົງອອກໄປທ່າມກາງປະຊາຊົນອີກ ຕັ້ງແຕ່ເບເອເຊບາຮອດພູເຂົາເອຟຣາຢິມ ແລະ
ນຳພວກເຂົາທັງຫລາຍກັບມາຫາພຣະຢາເວພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ.[5]ພະອົງຊົງຕັ້ງຜູ້ປົກຄອງໃນແຜ່ນດິນນັ້ນ
ໃນຫົວເມືອງທີ່ມີປ້ອມທັງຫມົດຂອງຢູດາ, ແຕ່ລະຫົວເມືອງ.
[6]ພະອົງກ່າວກັບຜູ້ປົກຄອງເຫລົ່ານັ້ນວ່າ, “ຈົ່ງພິຈາຣະນາສິ່ງທີ່ທ່ານທັງຫລາຍຈະເຮັດ, ເພາະທ່ານບໍ່ໄດ້ພິພາກສາເພື່ອມະນຸດ,
ແຕ່ເພື່ອພຣະຢາເວ, ພຣະອົງຊົງສະຖິດກັບທ່ານໃນການພິພາກສາ.[7]ສະນັ້ນ ຈົ່ງໃຫ້ຄວາມຢຳເກງພຣະຢາເວຢູ່ເຫນືອທ່ານ.
ຈົ່ງລະມັດຣະວັງສິ່ງທີ່ທ່ານເຮັດ, ເພາະພຣະຢາເວ ພຣະເຈົ້າຂອງເຮົາ, ບໍ່ມີຄວາມອະຍຸດຕິທັມ ບໍ່ເຫັນແກ່ຫນ້າຄົນໃດ ແລະ
ບໍ່ມີການຮັບສິນບົນ.”
[8]ຫລາຍກວ່ານັ້ນອີກ, ໃນເຢຣູຊາເລັມ ເຢໂຮຊາຟັດຊົງຕັ້ງຄົນເລວີ ແລະ ປະໂລຫິດນຳ, ກັບຫົວຫນ້າຂອງບັນພະບຸຣຸດແຫ່ງອິດສະຣາເອນ
ເພື່ອຈະໃຫ້ການພິພາກສາແຫ່ງພຣະຢາເວ, ແລະພິຈາຣະນາຄະດີທີ່ຂັດແຍ່ງກັນໃນເຢຣູຊາເລັມ.[9]ພຣະອົງຊົງສັ່ງພວກເຂົາ, ກ່າວວ່າ,
“ທ່ານທັງຫລາຍຈົ່ງກະທຳການນີ້ດ້ວຍຄວາມຢຳເກງພຣະຢາເວ, ດ້ວຍຄວາມສັດຊື່, ແລະ ດ້ວຍສຸດໃຈຂອງທ່ານ.
[10]ເມື່ອມີຄະດີມາເຖິງທ່ານຈາກພີ່ນ້ອງຂອງທ່ານຜູ້ອາສັຍຢູ່ໃນຫົວເມືອງຂອງຕົນ, ກ່ຽວກັບເລື່ອງຂ້າຟັນກັນ, ກົດຫມາຍ ຫລື ພຣະບັນຍັດ,
ກົດເກນ ຫລື ຄຳຕັດສິນ ທ່ານທັງຫລາຍກໍຄວນຈະຕັກເຕືອນ, ເພື່ອລາວຈະບໍ່ປົກປິດຄວາມຊົ່ວຕໍ່ພຣະຢາເວ, ຫລື
ພຣະພິໂຣດຈຶ່ງຈະບໍ່ມາເຫນືອທ່ານ ແລະ ພີ່ນ້ອງຂອງທ່ານ. ທ່ານຈົ່ງເຮັດເຊັ່ນນີ້ ແລ້ວທ່ານຈະບໍ່ກະທຳຊົ່ວ.
[11]ເບິ່ງແມ, ອາມາຣີຢາປະໂລຫິດໃຫຍ່ກໍຢູ່ເຫນືອທ່ານໃນພັນທະກິດຂອງພຣະຢາເວ. ເຊບາດີຢາລູກຊາຍອິຊະມາເອນ,
ເຈົ້ານາຍຂອງເຊື້ອສາຍຢູດາ, ກໍຢູ່ເຫນືອທ່ານໃນພັນທະກິດຂອງກະສັດ. ແລະຄົນເລວີຈະມີເຈົ້າຫນ້າທີ່ບົວລະບັດທ່ານ.
ຈົ່ງກະທຳການຢ່າງກ້າຫານ ແລະ ເຊື່ອຟັງຄຳສັ່ງສອນທັງຫລາຍ, ແລະ ຂໍພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບຜູ້ທ່ຽງທັມ.”


generated on Tue Jun 17 19:01:42 2025

20 [1]ຢູ່ມາພາຍຫລັງ, ຄົນໂມອາບ ແລະ ຄົນອຳໂມນ ພ້ອມກັບພວກເຂົາຍັງມີຄົນອື່ນນອກຈາກຄົນອຳໂມນ
ໄດ້ຂຶ້ນມາເຮັດສົງຄາມກັບເຢໂຮຊາຟັດ.[2]ມີຄົນມາທູນເຢໂຮຊາຟັດ, ກ່າວວ່າ, “ມີຄົນຫມູ່ໃຫຍ່ມາສູ້ຮົບກັບພະອົງຈາກຊີເຣຍເບື້ອງນີ້
ຈາກຟາກທະເລຟາກນັ້ນ, ແລະ ເບິ່ງແມ, ເຂົາທັງຫລາຍຢູ່ໃນຮາຊາໂຊນຕາມາ," ຄືເອັນເກດີ.

[3]ເຢໂຮຊາຟັດກໍຢ້ານກົວ ແລະ ຊອກສະແຫວງຫາພຣະຢາເວ. ພະອົງໄດ້ຊົງປະກາດໃຫ້ອົດອາຫານທົ່ວຢູດາ.
[4]ຢູດາໄດ້ຊຸມນຸມກັນສະແຫວງຫາຄວາມຊ່ວຍເຫລືອຈາກພຣະຢາເວ; ພວກເຂົາທັງຫລາຍພາກັນມາຈາກທົ່ວເມືອງທັງຫມົດແຫ່ງຢູດາ
ເພື່ອສະແຫວງຫາພຣະຢາເວ.
[5]ເຢໂຮຊາຟັດປະທັບຢືນຢູ່ໃນທີ່ປະຊຸມຂອງຢູດາ ແລະເຢຣູຊາເລັມ, ໃນພຣະວິຫານຂອງພຣະຢາເວ, ຕໍ່ຫນ້າເດີ່ນໃຫມ່.[6]ພະອົງໄດ້ກ່າວວ່າ,
“ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງຂ້າພະເຈົ້າທັງຫລາຍ, ພຣະອົງບໍ່ໄດ້ ເປັນພຣະເຈົ້າໃນຟ້າສະຫວັນ ຫລື?
ພຣະອົງບໍ່ໄດ້ປົກຄອງເຫນືອບັນດາຣາຊະອານາຈັກຂອງປະຊາຊາດຫລື? ໃນພຣະຫັດຂອງພຣະອົງມີຣິດ ແລະ ອຳນາດ
ຈຶ່ງບໍ່ມີຜູ້ໃດຕໍ່ຕ້ານພຣະອົງໄດ້.[7]ພຣະອົງເປັນພຣະເຈົ້າຂອງຂ້າພຣະອົງທັງຫລາຍບໍ່ແມ່ນຫລື
ຜູ້ຊົງຂັບໄລ່ຊາວແຜ່ນດິນນີ້ອອກໄປເສຍໃຫ້ພົ້ນຫນ້າອິສະຣາເອນປະຊາຊົນຂອງພຣະອົງ ແລະ ຊົງມອບໄວ້ແກ່ເຊື້ອສາຍຂອງອັບຣາຮາມ
ມິດສະຫາຍຂອງພຣະອົງເປັນນິດ?
[8]ພວກເຂົາໄດ້ອາໄສຢູ່ໃນນັ້ນ ແລະ ໄດ້ສ້າງສະຖານທີ່ບໍຣິສຸດແຫ່ງຫນຶ່ງໃນນັ້ນຖວາຍພຣະອົງ ເພື່ອພຣະນາມຊື່ຂອງພຣະອົງ ແລ້ວທູນວ່າ,
[9]‘ຖ້າເຫດຊົ່ວຮ້າຍເກີດຂຶ້ນມາເຫນືອຂ້າພະອົງທັງຫລາຍ, ຈະເປັນດາບ, ການພິພາກສາ, ຫລື ພະຍາດຣະບາດ, ຫລື ການອຶດຢາກອາຫານ
ຂ້າພະອົງທັງຫລາຍຈະຢືນຢູ່ຕໍ່ຫນ້າພຣະວິຫານນີ້ ແລະ ຕໍ່ພຣະພັກພຣະອົງ (ເພາະພຣະນາມຊື່ຂອງພຣະອົງຢູ່ໃນພຣະວິຫານນີ້), ແລະ
ຮ້ອງທູນຕໍ່ພຣະອົງໃນຄວາມທຸກໃຈຂອງຂ້າພະອົງທັງຫລາຍ, ແລະ ພຣະອົງຈະຊົງຟັງ ແລະຊ່ວຍໃຫ້ລອດພົ້ນ.’
[10]ເບິ່ງແມ ບັດນີ້, ຄົນອຳໂມນ, ໂມອາບ ແລະ ພູເຂົາເສອີ ຜູ້ຊຶ່ງພຣະອົງບໍ່ຊົງຍອມໃຫ້ຄົນອິສະຣາເອນບຸກລຸກ
ຕອນທີ່ພວກເຂົາອອກມາຈາກແຜ່ນດິນເອຢິບ; ແລະ ຜູ້ຊຶ່ງພວກເຂົາໄດ້ຫລີກໄປບໍ່ໄດ້ທຳລາຍເສຍ.[11]ເບິ່ງແມ,
ພວກເຂົາໄດ້ໃຫ້ບຳເຫນັດແກ່ເຮົາຢ່າງໃດ; ດ້ວຍການມາຂັບໄລ່ເຮົາອອກເສຍຈາກແຜ່ນດິນກຳມະສິດຂອງພຣະອົງ
ທີ່ພຣະອົງປະທານໃຫ້ແກ່ຂ້າພະອົງທັງຫລາຍເປັນມໍຣະດົກ.
[12]ຂ້າແດ່ພຣະເຈົ້າຂອງຂ້າພະອົງທັງຫລາຍ, ພຣະອົງຈະບໍ່ຊົງກະທຳການພິພາກສາເຫນືອພວກເຂົາຫລື? ເພາະວ່າຂ້າ
ພຣະອົງທັງຫລາຍບໍ່ມີຣິດທີ່ຈະຕໍ່ສູ້ຄົນຫມູ່ໃຫຍ່ນີ້ ຊຶ່ງກຳລັງມາຕໍ່ສູ້ກັບຂ້າພະອົງ. ຂ້າພະອົງບໍ່ຮູ້ວ່າຈະເຮັດປະການໃດ,
ແຕ່ດວງຕາຂອງຂ້າພະອົງທັງຫລາຍເບິ່ງທີ່ພຣະອົງ.”[13]ໃນລະຫວ່າງນັ້ນຄົນທັງປວງຂອງຢູດາກໍຢືນຢູ່ຕໍ່ພຣະພັກພຣະຢາເວ, ພ້ອມກັບເມຍ, ແລະ
ລູກຫລານຂອງພວກເຂົາ.
[14]ໃນທ່າມກາງທີ່ປະຊຸມ, ພຣະວິນຍານຂອງພຣະຢາເວສະເດັດມາສະຖິດກັບຢາຮາຊີເອນ, ລູກຊາຍເຊຄາຣີຢາ, ຜູ້ເປັນລູກຊາຍເບນາຢາ,
ຜູ້ເປັນລູກຊາຍເຢອີເອນ, ຜູ້ເປັນລູກຊາຍມັດຕານີຢາ, ເປັນຄົນເລວີ, ລູກຫລານຂອງອາສັບ.[15]ຢາຮາຊີເອັນ, ເພິ່ນໄດ້ເວົ້າວ່າ, “ຄົນຢູດາທັງປວງ
ແລະ ຊາວເຢຣູຊາເລັມທັງຫລາຍ ກັບກະສັດເຢໂຮຊາຟັດ ຂໍຈົ່ງຟັງ. ພຣະຢາເວກ່າວດັ່ງນີ້ແກ່ທ່ານທັງຫລາຍວ່າ, ‘ຢ່າຢ້ານເລີຍ ແລະ
ຢ່າທໍ້ຖອຍດ້ວຍຄົນຫມູ່ໃຫຍ່ນີ້ ເພາະວ່າເສິກສົງຄາມນັ້ນບໍ່ແມ່ນຂອງທ່ານ, ແຕ່ເປັນຂອງພຣະເຈົ້າ.
[16]ມື້ອື່ນເຊົ້ານີ້ທ່ານທັງຫລາຍຈົ່ງລົງໄປຕໍ່ສູ້ກັບພວກເຂົາ. ເບິ່ງແມ, ພວກເຂົາຈະຂຶ້ນມາເຖິງໂດຍຜ່ານທາງຊິສ.
ທ່ານຈະພົບພວກເຂົາທີ່ສິ້ນສຸດຂອງພູເຂົາ, ຕໍ່ຫນ້າຖິ່ນແຫ້ງແລ້ງກັນດານເຢຣູເອນ.[17]ບໍ່ຈຳເປັນທີ່ທ່ານຈະຕ້ອງສູ້ຮົບໃນສົງຄາມເທື່ອນີ້. ໂອ, ຢູດາ
ແລະ ເຢຣູຊາເລັມ ຈົ່ງເຂົ້າປະຈຳທີ່ ຢືນນິ່ງຢູ່ ແລະເບິ່ງຊັຍຊະນະຂອງພຣະຢາເວເພື່ອທ່ານ,’ ກໍຢ່າຢ້ານເລີຍ ຢ່າທໍ້ຖອຍ
ມື້ອື່ນນີ້ຈົ່ງອອກໄປສູ້ກັບພວກເຂົາ ເພາະພຣະຢາເວຈະຊົງສະຖິດຢູ່ກັບທ່ານ.”
[18]ເຢໂຮຊາຟັດກົ້ມພະພັກຂອງພະອົງລົງເຖິງດິນ. ຢູດາທັງປວງກັບຊາວເຢຣູຊາເລັມໄດ້ຂາບລົງຕໍ່ພຣະພັກພຣະຢາເວ, ນະມັສະການພຣະອົງ.
[19]ຄົນເລວີ, ຈາກລູກຫລານຄົນໂກຮາດ ແລະ ລູກຫລານຄົນໂກຣາ, ໄດ້ຢືນຂຶ້ນຖວາຍສັນຣະເສີນແດ່ພຣະຢາເວ,
ພຣະເຈົ້າແຫ່ງອິສຣາເອນດ້ວຍສຽງອັນດັງໃນທີ່ສູງ.
[20]ພວກເຂົາໄດ້ລຸກຂຶ້ນແຕ່ເຊົ້າ ແລະ ອອກໄປໃນຖິ່ນແຫ້ງແລ້ງກັນດານແຫ່ງເຕໂກອາ. ແລະເມື່ອອອກໄປ, ເຢໂຮຊາຟັດປຣະທັບຢືນ ແລະ
ກ່າວວ່າ, “ໂອ ຢູດາ, ແລະ ຊາວເຢຣູຊາເລັມເອີຍ ຈົ່ງຟັງຂ້າພະເຈົ້າ! ຈົ່ງ ເຊື່ອພຣະຢາເວພຣະເຈົ້າຂອງທ່ານ, ແລະ ທ່ານຈະຕັ້ງຫມັ້ນຄົງຢູ່.
ຈົ່ງເຊື່ອບັນດາຜູ້ທຳນວາຍຂອງພຣະອົງ, ແລະ ທ່ານຈະສຳເລັດຜົນ.”[21]ເມື່ອພະອົງໄດ້ປຶກສາກັບປະຊາຊົນແລ້ວ,
ພະອົງໄດ້ຊົງແຕ່ງຕັ້ງບັນດາຜູ້ທີ່ຈະຮ້ອງເພງຖວາຍພຣະຢາເວ ແລະ ໃຫ້ສັນຣະເສີນພຣະອົງດ້ວຍເຄື່ອງປະດັບແຫ່ງຄວາມບໍຣິສຸດ,
ຂະນະທີ່ພວກເຂົາຍ່າງອອກໄປຕໍ່ຫນ້າສັດຕຣູ, ແລະ ຮ້ອງເພງວ່າ, “ຈົ່ງຖວາຍໂມທະນາແດ່ພຣະຢາເວ,
ເພາະຄວາມເມດຕາຂອງພຣະອົງດຳຣົງຢູ່ເປັນນິດ.”
[22]ເມື່ອພວກເຂົາຕັ້ງຕົ້ນຮ້ອງເພງ ແລະ ສັນຣະເສີນ, ພຣະຢາເວຊົງຈັດກອງຊຸ້ມຄອຍຖ້າຕໍ່ສູ້ກັບຄົນອຳໂມນ, ໂມອາບ ແລະຊາວພູເຂົາເສອີ,
ຜູ້ໄດ້ເຂົ້າມາຕໍ່ສູ້ກັບຢູດາ. ດັ່ງນັ້ນ ພວກເຂົາຈຶ່ງແຕກພ່າຍໄປ.[23]ເພາະວ່າຄົນຂອງອຳໂມນ ແລ ະຂອງໂມອາບໄດ້ລຸກຂຶ້ນຕໍ່ສູ້ກັບຊາວພູເຂົາເສອີ,
ທຳລາຍພວກເຂົາເສຍຢ່າງສິ້ນເຊີງ. ເມື່ອພວກເຂົາທຳລາຍຊາວເສອີຫມົດແລ້ວ, ພວກເຂົາກໍຊ່ວຍກັນທຳລາຍກັນເອງ.
[24]ເມື່ອຢູດາຂຶ້ນໄປຢູ່ທີ່ຫໍຄອຍໃນຖິ່ນແຫ້ງແລ້ງກັນດານ, ແລ້ວເບິ່ງຊື່ໄປທີ່ຄົນຫມູ່ໃຫຍ່ນັ້ນ. ເບິ່ງແມ, ມີແຕ່ສົບນອນຢູ່ເທິງແຜ່ນດິນ,
ນອນຢູ່ພື້ນດິນ; ບໍ່ມີຈັກຄົນດຽວທີ່ລອດພົ້ນໄປໄດ້.
[25]ເມື່ອເຢໂຮຊາຟັດ ແລະ ປະຊາຊົນຂອງພະອົງມາເກັບເຄື່ອງທີ່ຍຶດໄດ້ພ້ອມກັບສົບທັງຫລາຍນັ້ນ, ເຂົາພົບສິ່ງຂອງເປັນຈຳນວນຫລາຍ, ເຄື່ອງນຸ່ງ,
ທັງຊັບສົມບັດ, ແລະ ເພັດພອຍຕ່າງໆ, ຊຶ່ງພວກເຂົາເກັບມາສຳລັບຕົວຈົນຂົນໄປບໍ່ໄຫວ. ພວກເຂົາເກັບເຄື່ອງທີ່ຍຶດໄດ້ນັ້ນສາມມື້
ເພາະຫລາຍເຫລືອເກີນ.[26]ໃນມື້ທີສີ່ ພວກເຂົາທັງຫລາຍໄດ້ຊຸມນຸມກັນທີ່ພູເຂົາເບຣາກາ. ໃນບ່ອນນັ້ນ ພວກເຂົາໄດ້ສັນຣະເສີນພຣະຢາເວ,
ສະຖານທີ່ນັ້ນຈຶ່ງຖືກເອີ້ນວ່າ, "ພູເຂົາເບຣາກາ" ຈົນເຖິງທຸກມື້ນີ້.


generated on Tue Jun 17 19:01:42 2025

27ຄົນຢູດາ ແລະ ເຢຣູຊາເລັມທຸກຄົນ ແລະ ເຢໂຮຊາຟັດຊຶ່ງນຳໜ້າ ກັບໄປໃນເຢຣູຊາເລັມດ້ວຍຄວາມຊື່ນບານ
ເພາະພຣະຢາເວໄດ້ຊົງກະທຳໃຫ້ພວກເຂົາຊື່ນຊົມຍິນດີເປາະເຍີຍສັດຕຣູຂອງຕົນ. 28ພວກເຂົາເຂົ້າມາໃນເຢຣູຊາເລັມດ້ວຍພິນໃຫຍ່ ພິນຄູ່
ແລະແກ ມາຫາພຣະວິຫານຂອງພຣະຢາເວ.
29ຄວາມຢຳເກງພຣະເຈົ້າກໍຢູ່ເໜືອບັນດາຣາຊະອານາຈັກຂອງປະເທດທັງປວງ ເມື່ອເຂົາໄດ້ຍິນວ່າພຣະຢາເວຊົງຕໍ່ສູ້ສັດຕຣູຂອງອິສະຣາເອນ.
30ດິນແດນຂອງເຢໂຮຊາຟັດຈຶ່ງສະຫງົບງຽບ, ເພາະວ່າພຣະເຈົ້າຂອງພະອົງຊົງປຣະທານໃຫ້ພະອົງມີຄວາມສະຫງົບຢູ່ຮອບດ້ານ.
31ເຢໂຮຊາຟັດຊົງປົກຄອງຢູ່ເໜືອຢູດາ: ເມື່ອພະອົງຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸສາມສິບຫ້າປີ ແລະ
ພະອົງຊົງປົກຄອງໃນເຢຣູຊາເລັມຊາວຫ້າປີ. ພະມານດາຂອງພະອົງຊົງພະນາມວ່າ ອາຊູບາ, ລູກສາວຊິນຮີ.
32ພະອົງຊົງດຳເນີນຕາມວິທີຂອງອາຊາບິດາຂອງພະອົງ, ແລະ ບໍ່ໄດ້ຊົງຫັນເຫໄປຈາກທາງນັ້ນ;
ພະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຢາເວ. 33ຢ່າງໃດກໍດີ, ປູຊະນີຍະສະຖານສູງຍັງບໍ່ໄດ້ຖືກກຳຈັດອອກໄປ.
ປະຊາຊົນຍັງບໍ່ໄດ້ປັກໃຈໃນພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ.
34ສ່ວນພະຣາຊະກິດນອກນັ້ນຂອງເຢໂຮຊາຟັດ, ຕັ້ງແຕ່ຕົ້ນຈົນເຖິງທີ່ສຸດ, ໄດ້ມີບັນທຶກໄວ້ໃນໜັງສືປະຫວັດສາດຂອງເຢຮູລູກຊາຍຮານານີ,
ຊຶ່ງລວມເຂົ້າໃນໜັງສືຂອງກະສັດແຫ່ງອິສະຣາເອນ.
35ຫລັງຈາກນີ້ເຢໂຮຊາຟັດ, ກະສັດຂອງຢູດາ, ໄດ້ຊົງຮ່ວມງານກັບອາຮາຊີຢາ, ກະສັດຂອງອິສະຣາເອນ, ຜູ້ຊົງກະທຳໃນສິ່ງທີ່ຊົ່ວຮ້າຍຫລາຍ.
36ພະອົງຊົງຮ່ວມງານໃນເລື່ອງການສ້າງເຮືອໄປຫາເມືອງຕາຊິດ. ພວກເຂົາໄດ້ສ້າງເຮືອໃນເອັດຊີໂອນເກເບ.
37ແລ້ວເອລີເອເຊລູກຊາຍໂດດາວາຮູແຫ່ງເມືອງມາເຣຊາ, ໄດ້ທຳນວາຍເຖິງເຢໂຮຊາຟັດວ່າ, “ເພາະພະອົງ ຊົງຮ່ວມງານກັບອາຮາຊີຢາ,
ພຣະຢາເວຈະຊົງທຳລາຍສິ່ງທີ່ພະອົງເຮັດ.” ເຮືອກໍແຕກບໍ່ສາມາດໄປເມືອງຕາຊິດໄດ້.


generated on Tue Jun 17 19:01:42 2025

21 [1]ເຢໂຮຊາຟັດກໍລ່ວງຫລັບໄປຢູ່ກັບບັນພະບຸຣຸດຂອງພະອົງ ແລະ ພວກເຂົາຝັງພະສົບໄວ້ກັບບັນພະບຸຣຸດຂອງພະອົງໃນນະຄອນດາວິດ;
ເຢໂຮຣາມ, ລູກຊາຍຂອງພະອົງ, ປົກຄອງແທນ.[2]ຜູ້ເປັນລູກຊາຍຂອງເຢໂຮຊາຟັດຄື ອາຊາຣີຢາ, ເຢຮີເອນ, ເຊຄາຣີຢາ, ອາຊາຣີຢາ,
ມີກາເອນ, ແລະ ເຊຟາຕີຢາ. ພວກເຫລົ່ານີ້ທັງຫມົດເປັນລູກຊາຍຂອງເຢໂຮຊາຟັດກະສັດຂອງອິສະຣາເອນ.[3]ບິດາຂອງພວກເຂົາປະທານເງິນ,
ຄໍາ, ແລະເຄື່ອງຂອງອັນມີຄ່າຫລວງຫລາຍ, ພ້ອມກັບຫົວເມືອງທີ່ມີປ້ອມໃນຢູດາ, ແຕ່ພະອົງປຣະທານຣາຊະອານາຈັກແກ່ເຢໂຮຣາມ,
ເພາະວ່າເພິ່ນເປັນລູກຊາຍຫົວປີ.

[4]ບັດນີ້ເມື່ອເຢໂຮຣາມໄດ້ຂຶ້ນປົກຄອງຣາຊະອານາຈັກຂອງພະບິດາ ແລະ ທີ່ໄດ້ສະຖາປະນາໄວ້ແລ້ວໃຫ້ຕົນເອງເປັນກະສັດ,
ພະອົງຊົງປຣະຫານນ້ອງຊາຍຂອງພະອົງຈົນຫມົດດ້ວຍດາບ, ແລະ ທັງເຈົ້ານາຍບາງຄົນຂອງອິສະຣາເອນດ້ວຍ.
[5]ເຢໂຮຣາມມີອາຍຸສາມສິບສອງປີເມື່ອໄດ້ຊົງເປັນກະສັດ, ແລະ ຊົງປົກຄອງໃນເຢຣູຊາເລັມແປດປີ.
[6]ພະອົງຊົງດໍາເນີນຕາມເສັ້ນທາງຂອງບັນດາກະສັດແຫ່ງອິສະຣາເອນ, ຕາມຄືທີ່ຣາຊະວົງອາຮາບກະທໍາ,
ເພາະວ່າທິດາຂອງອາຮາບເປັນມະເຫສີຂອງພະອົງ, ແລະ ພະອົງຊົງກະທໍາສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດພຣະຢາເວ.[7]ຢ່າງໃດກໍດີ,
ພຣະຢາເວຈະບໍ່ຊົງທໍາລາຍເຊື້ອສາຍຂອງດາວິດ, ເພາະເຫດຄໍາຫມັ້ນສັນຍາຊຶ່ງພຣະອົງຊົງ ກະທໍາໄວ້ກັບດາວິດ,
ເຫດທີ່ພຣະອົງຊົງສັນຍາວ່າຈະປຣະທານຕະກຽງແກ່ດາວິດ ແລະ ແກ່ລູກຫລານຂອງພະອົງເປັນນິດ.
[8]ໃນຣາຊະການຂອງເຢໂຮອາມ, ເອໂດມໄດ້ກະບົດອອກຈາກການປົກຄອງຂອງຢູດາ, ແລະ ຕັ້ງກະສັດຂຶ້ນເຫນືອຕົນ.
[9]ແລ້ວເຢໂຮຣາມກໍສະເດັດອອກໄປພ້ອມກັບບັນດາເຈົ້ານາຍ ແລະຣົດຮົບທັງຫມົດຂອງພະອົງ.
ພະອົງຊົງລຸກຂຶ້ນໃນກາງຄືນໂຈມຕີຄົນເອໂດມທີ່ມາອ້ອມພະອົງ ແລະ ຜູ້ບັງຄັບບັນຊາຣົດຮົບໄວ້.
[10]ດັ່ງນັ້ນເອໂດມຈຶ່ງໄດ້ກະບົດອອກຈາກການປົກຄອງຂອງຢູດາຈົນທຸກມື້ນີ້. ເທື່ອນັ້ນລິບນາກໍໄດ້ກະບົດອອກຈາກການປົກຄອງຂອງພະອົງດ້ວຍ,
ເພາະວ່າເຢໂຮອາມໄດ້ຊົງປະຖິ້ມພຣະຢາເວ, ພຣະເຈົ້າຂອງບັນພະບຸຣຸດຂອງພະອົງ.
[11]ນອກຈາກນັ້ນອີກ, ເຢໂຮອາມຊົງສ້າງປູຊະນີຍະສະຖານສູງໃນພູເຂົາຂອງຢູດາ ແລະ ຊົງນໍາຊາວເຢຣູຊາເລັມມີຊີວິດເຫມືອນໂສເພນີ, ແລະ
ຊົງກະທໍາໃຫ້ຢູດາຫລົງຜິດໄປ.
[12]ຈົດຫມາຍສະບັບຫນຶ່ງມາຈາກເອລີຢາ, ຜູ້ທໍານວາຍວ່າ, “ພຣະຢາເວພຣະເຈົ້າຂອງ ດາວິດ ບັນພະບຸຣຸດຂອງພະອົງ ກ່າວດັ່ງນີ້ວ່າ:
‘ເພາະເຈົ້າບໍ່ໄດ້ດໍາເນີນໃນບັນດາເສັ້ນທາງຂອງເຢໂຮຊາຟັດ, ບິດາຂອງເຈົ້າ, ຫລືໃນບັນດາເສັ້ນທາງຂອງອາຊາກະສັດຂອງຢູດາ.
[13]ແຕ່ໄດ້ເດີນໃນເສັ້ນທາງຂອງບັນດາກະສັດແຫ່ງອິສະຣາເອນ, ແລະ ໄດ້ນໍາຢູດາກັບຊາວເຢຣູຊາເລັມໄປໃນທາງເຊັ່ນໂສເພນີ,
ຄືກັບຣາຊະວົງອາຮາບ ແລະ ເຈົ້າໄດ້ຂ້າພວກນ້ອງຊາຍຂອງເຈົ້າ ຜູ້ເປັນເຊື້ອວົງບິດາຂອງເຈົ້າ ທັງທີ່ພວກເຂົາດີກວ່າເຈົ້າ.[14]ເບິ່ງແມ,
ພຣະຢາເວຈະຊົງນໍາພັຍພິບັດອັນຍິ່ງໃຫຍ່ມາເຫນືອຊົນຊາດຂອງເຈົ້າ, ລູກຫລານຂອງເຈົ້າ, ເມຍຂອງເຈົ້າ, ແລະ ສິ່ງຂອງທັງຫມົດຂອງເຈົ້າ.
[15]ຕົວເຈົ້າເອງຈະມີຄວາມເຈັບປ່ວຍສາຫັດດ້ວຍພະຍາດລໍາໄສ້ຮ້າຍແຮງ ຈົນກວ່າລໍາໄສ້ຂອງເຈົ້າຈະອອກມາ
ເພາະເຫດພະຍາດນັ້ນນັບມື້ນັບຮ້າຍແຮງ, ເພາະໂຣກນັ້ນ.’”
[16]ພຣະຢາເວຊົງເຮັດໃຫ້ຄວາມຮ້າຍຂອງຄົນຟີລິສະຕິນ ແລະ ຂອງຄົນອາຫລັບ ຜູ້ຢູ່ໃກ້ກັບຄົນເອທີໂອເປຍທີ່ມີຕໍ່ເຢໂຮຣາມ.
[17]ພວກເຂົາທັງຫລາຍຍົກທັບມາຕໍ່ສູ້ກັບຢູດາ, ແລະ ບຸກລຸກເຂົ້າໄປໃນນັ້ນ ແລະຂົນສິ່ງຂອງທັງຫມົດທີ່ມີໃນຣາຊະສໍານັກ. ທັງບັນດາລູກຊາຍ
ແລະ ມະເຫສີຂອງພະອົງ. ຈຶ່ງບໍ່ມີລູກຊາຍເຫລືອໄວ້ໃຫ້ແກ່ພະອົງນອກຈາກເຢໂຮອາຮາດລູກຊາຍອົງສຸດທ້າຍຂອງພະອົງ.
[18]ພາຍຫລັງເລື່ອງເຫລົ່ານີ້, ພຣະຢາເວຊົງເຮັດໃຫ້ລໍາໄສ້ຂອງເຢໂຮຣາມເປັນພະຍາດຊຶ່ງຮັກສາບໍ່ໄດ້.[19]ຕໍ່ມາເປັນເວລາຄົບສອງປີ,
ລໍາໄສ້ຂອງພະອົງກໍອອກມາເພາະພະຍາດນັ້ນ ແລະພະອົງກໍສິ້ນພະຊົນດ້ວຍຄວາມທຸກທໍຣະມານຢ່າງຍິ່ງ.
ປະຊາຊົນຂອງພະອົງບໍ່ໄດ້ກໍແປວໄຟຖວາຍກຽດແກ່ພະອົງ ຄືກັບທີ່ໄດ້ກໍແປວໄຟໃຫ້ກັບບັນພະບຸຣຸດຂອງພະອົງ.[20]ເມື່ອພະອົງຊົງເລີ່ມປົກຄອງນັ້ນ
ພະອົງມີອາຍຸສາມສິບສອງປີ; ຊົງປົກຄອງໃນເຢຣູຊາເລັມແປດປີ, ແລະ ພະອົງໄດ້ຊົງຈາກໄປໂດຍບໍ່ມີໃຜອາໄລ.
ພວກເຂົາຝັງພະສົບໄວ້ໃນນະຄອນດາວິດ ແຕ່ບໍ່ແມ່ນໃນຂຸມຝັງສົບຂອງບັນດາກະສັດ.

22 [1]ຊາວເຢຣູຊາເລັມໄດ້ໃຫ້ອາຮາຊີຢາ, ລູກຊາຍອົງສຸດທ້າຍຂອງພະອົງ, ເປັນກະສັດແທນພະອົງ,
ເພາະຄົນຫມູ່ນັ້ນມາເຖິງຄ້າຍກັບຄົນອາຫລັບໄດ້ຂ້າລູກຊາຍຜູ້ເປັນອ້າຍເສຍທັງຫມົດ. ດັ່ງນັ້ນອາຮາຊີຢາລູກຊາຍຂອງເຢໂຮຣາມ,
ກະສັດຂອງຢູດາ, ຈຶ່ງຂຶ້ນປົກຄອງ.[2]ອາຮາຊີຢາເລີ່ມປົກຄອງນັ້ນ ພະອົງມີອາຍຸສີ່ສິບສອງປີ ເມື່ອຊົງປົກຄອງໃນເຢຣູຊາເລັມຫນຶ່ງປີ.
ພະມານດາຂອງພະອົງຊົງພະນາມວ່າ ນາງອາທາລີຢາ; ນາງເປັນລູກສາວຂອງອົມຣີ.
[3]ພະອົງຊົງດໍາເນີນໃນທາງທັງຫລາຍແຫ່ງຣາຊະວົງຂອງອາຮາບດ້ວຍ
ເພາະວ່າພະມານດາຂອງພະອົງເປັນທີ່ປຶກສາໃນການເຮັດຄວາມຊົ່ວຮ້າຍຂອງພະອົງ.

[4]ອາຮາຊີຢາຊົງເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ, ຄືກັບຣາຊະວົງຂອງອາຮາບໄດ້ເຮັດ,
ເພາະວ່າຫລັງຈາກພະບິດາຂອງພະອົງສິ້ນພະຊົນແລ້ວ ພວກເຂົາທັງຫລາຍກໍເປັນທີ່ປຶກສາຂອງພະອົງ, ນໍາໄປສູ່ຄວາມຈິບຫາຍຂອງພະອົງ.
[5]ພະອົງຊົງປະຕິບັດຕາມຄໍາປຶກສາຂອງພວກເຂົາ; ແລະສະເດັດໄປກັບເຢໂຮຣາມລູກຊາຍຂອງອາຮາບ, ກະສັດແຫ່ງອິສະຣາເອນ,
ເພື່ອເຮັດສົງຄາມກັບຮາຊາເອນ, ກະສັດຂອງອາຣາມ, ທີ່ເມືອງຣາໂມດກີເລອາດ. ຄົນຊີເຣຍໄດ້ເຮັດໃຫ້ໂຢຣາມບາດເຈັບ.
[6]ໂຢຣາມຊົງກັບມາທີ່ເຢດຊະເຣເອນ ເພື່ອຮັກສາບາດແຜຊຶ່ງພະອົງໄດ້ຮັບທີ່ເມືອງຣາມາ, ພະອົງຊົງຕໍ່ສູ້ກັບຮາຊາເອນ, ກະສັດຂອງຊີເຣຍ,
ດັ່ງນັ້ນອາຊາຣີຢາລູກຊາຍຂອງເຢໂຮຣາມ, ກະສັດຂອງຢູດາ, ສະເດັດລົງໄປເຝົ້າເຢໂຮຣາມ ລູກຊາຍຂອງອາຮາບໃນເມືອງເຢດຊະເຣເອນ,
ເພາະວ່າພະອົງປ່ວຍຫນັກ.
[7]ບັດນີ້ພຣະເຈົ້າຊົງກໍານົດໄວ້ແລ້ວວ່າ ຄວາມຫລົ້ມຈົມຂອງອາຮາຊີຢາຈະມາໂດຍທີ່ພະອົງສະເດັດລົງໄປຢ້ຽມ ໂຢຣາມ.
ເພາະເມື່ອພະອົງສະເດັດໄປບ່ອນນັ້ນ, ພະອົງສະເດັດອອກໄປກັບເຢໂຮຣາມ ເພື່ອຈະປະທະກັບເຢຮູລູກຊາຍນິມຊີ,
ຜູ້ຊຶ່ງພຣະຢາເວໄດ້ຊົງຕັ້ງໄວ້ໃຫ້ຕັດຣາຊະວົງຂອງອາຮາບອອກເສຍ.[8]ຢູ່ມາເມື່ອເຢຮູກໍາລັງສໍາເລັດໂທດຣາຊະວົງຂອງອາຮາບ,
ເພິ່ນໄດ້ພົບເຈົ້ານາຍຂອງຢູດາ ແລະ ບັນດາລູກຊາຍອ້າຍຂອງອາຮາຊີຢາ ຜູ້ມາບົວລະບັດອາຮາຊີຢາ.
ເພິ່ນກໍໄດ້ປະຫານພວກເຂົາທັງຫລາຍເສຍ.
[9]ເຢຮູໄດ້ຄົ້ນຫາອາຮາຊີຢາ; ພະອົງກໍຖືກຈັບຕອນທີ່ລີ້ພະອົງຢູ່ໃນຊາມາເຣຍ, ພວກເຂົາພາພະອົງມາຫາເຢຮູ, ເພື່ອປະຫານຊີວິດພະອົງເສຍ.
ພວກເຂົາກໍຝັງພະສົບໄວ້, ໂດຍກ່າວວ່າ, “ພະອົງຊົງເປັນລູກຊາຍຂອງເຢໂຮຊາຟັດ,
ຜູ້ສະແຫວງຫາພຣະຢາເວດ້ວຍສິ້ນສຸດພະທັຍຂອງພະອົງ,” ດັ່ງນັ້ນຣາຊະວົງຂອງອາຮາຊີຢາບໍ່ມີຜູ້ໃດສາມາດປົກຄອງຣາຊະອານາຈັກໄດ້.
[10]ບັດນີ້ອາທາລີຢາ, ແມ່ຂອງອາຮາຊີຢາ, ເຫັນວ່າລູກຊາຍຂອງພະນາງສິ້ນພະຊົນແລ້ວ,
ພະນາງກໍລຸກຂຶ້ນທໍາລາຍເຊື້ອພະວົງແຫ່ງຣາຊະວົງຂອງຢູດາຈົນຫມົດ.[11]ແຕ່ພະນາງເຢໂຮຊາບາ, ລູກສາວຂອງກະສັດ, ໄດ້ນໍາໂຢອາດ,
ລູກຊາຍຂອງອາຮາຊີຢາ, ໄປເສຍຈາກທ່າມກາງບັນດາລູກຊາຍຂອງກະສັດ ຜູ້ຊຶ່ງຈະຕ້ອງຖືກປຣະຫານ. ນາງກໍເຊື່ອງໂຢອາດ
ທັງຜູ້ລ້ຽງຂອງນາງໄວ້ໃນຫ້ອງນອນ. ດັ່ງນັ້ນແຫລະ ເຢໂຮຊາບາ, ລູກສາວຂອງກະສັດເຢໂຮຣາມ, ເມຍຂອງປະໂລຫິດເຢໂຮຢາດາ
(ເພາະວ່າພະນາງເປັນນ້ອງສາວຂອງອາຮາຊີຢາ), ໄດ້ເຊື່ອງໂຢອາດ, ໃຫ້ພົ້ນຈາກພະນາງອາທາລີຢາເພື່ອບໍ່ໃຫ້ພະນາງປຣະຫານໂຢອາດໄດ້.
[12]ໂຢອາດໄດ້ຢູ່ກັບນາງໃນພຣະວິຫານຂອງພຣະເຈົ້າເຊື່ອງຕົວຢູ່ຫົກປີ, ຝ່າຍພະນາງອາທາລີຢາກໍໄດ້ປົກຄອງແຜ່ນດິນ.

## 23

1ໃນປີທີເຈັດ, ເຢໂຮຢາດາໄດ້ສະແດງຄວາມກຳລັງ ແລະ ໃຫ້ພວກນາຍຮ້ອຍເຮັດຄຳຫມັ້ນສັນຍາກັບຕົນ, ມີອາຊາຣີຢາລູກຊາຍເຢໂຮຣາມ,
ອິດຊະມາເອນລູກຊາຍເຢໂຮຮານັນ, ອາຊາຣີຢາລູກຊາຍໂອເບັດ, ມາອາເສຢາລູກຊາຍອາດາຢາ, ແລະ ເອລີຊາຟັດລູກຊາຍຊິກຣີ.
2ພວກເຂົາທັງຫລາຍທ່ຽວໄປທົ່ວຢູດາ ແລະຮວບຮວມຄົນເລວີມາຈາກທຸກຫົວເມືອງຂອງຢູດາ,
ທັງບັນດາຫົວຫນ້າຂອງບັນພະບຸຣຸດຂອງອິສະຣາເອນ, ແລະ ມາຍັງເຢຣູຊາເລັມ.
3ບັນດາຊຸມນຸມຊົນທັງຫມົດກໍເຮັດຄຳຫມັ້ນສັນຍາກັບກະສັດໃນພຣະວິຫານຂອງພຣະເຈົ້າ. ເຢໂຮຢາດາກ່າວແກ່ພວກເຂົາທັງຫລາຍວ່າ,
“ເບິ່ງແມ ລູກຊາຍຂອງກະສັດຈະປົກຄອງ, ຕາມທີ່ພຣະຢາເວກ່າວກ່ຽວກັບບັນດາເຊື້ອສາຍຂອງດາວິດ.

4ທ່ານທັງຫລາຍຈົ່ງເຮັດຢ່າງນີ້ຄື ທ່ານຜູ້ເປັນປະໂລຫິດ ແລະຄົນເລວີຜູ້ອອກເວນຍາມໃນວັນສະບາໂຕຫນຶ່ງໃນສາມ, ໃຫ້ເປັນຄົນເຝົ້າປະຕູ.
5ອີກຫນຶ່ງໃນສາມໃຫ້ຢູ່ທີ່ພະຣາຊະສຳນັກ, ແລະ ຫນຶ່ງໃນສາມໃຫ້ຢູ່ທີ່ປະຕູໂຂງ. ໃຫ້ປະຊາຊົນທັງປວງຢູ່ໃນເດີ່ນພຣະວິຫານຂອງພຣະຢາເວ.
6ຢ່າໃຫ້ຈັກຄົນຫນຶ່ງເຂົ້າໄປໃນພຣະວິຫານຂອງພຣະຢາເວ, ນອກຈາກປະໂລຫິດ ແລະ ຄົນເລວີທີ່ບົວລະບັດຢູ່. ພວກເຂົາທັງຫລາຍເຂົ້າໄປໄດ້
ເພາະພວກເຂົາບໍຣິສຸດ. ແຕ່ປະຊາຊົນທັງປວງຈະຕ້ອງຮັກສາການບັງຄັບບັນຊາຂອງພຣະຢາເວ.7ໃຫ້ຄົນເລວີອ້ອມກະສັດໄວ້,
ແຕ່ລະຄົນໃຫ້ຖືອາວຸດ. ຜູ້ໃດເຂົ້າໄປໃນພຣະວິຫານນັ້ນຈະຕ້ອງຖືກປຣະຫານ. ຈົ່ງຢູ່ກັບກະສັດເມື່ອພະອົງສະເດັດເຂົ້າມາ ແລະ
ເມື່ອພະອົງສະເດັດອອກໄປ.”
8ດັ່ງນັ້ນຄົນເລວີ ແລະ ຄົນຢູດາທັງປວງໄດ້ເຮັດທຸກສິ່ງທີ່ປະໂລຫິດເຢໂຮຢາດາໄດ້ບັນຊາໄວ້. ພວກເຂົາຕ່າງກໍນຳຄົນຂອງຕົນມາ,
ຄືທັງຄົນທີ່ອອກເວນຍາມໃນວັນສະບາໂຕ, ແລະ ບັນດາຄົນເຫລົ່ານັ້ນທີ່ຈະເຂົ້າເວນຍາມ ໃນວັນສະບາໂຕ, ເພາະເຢໂຮຢາດາ,
ປະໂລຫິດໄດ້ບໍ່ໄດ້ປ່ອຍກອງເວນຍາມໃຫ້ອອກເວນ.9ເຢໂຮຢາດາ, ປະໂລຫິດ, ໄດ້ມອບຫອກກັບຫອກ ແລະ
ໂລ່ຊຶ່ງເປັນຂອງກະສັດດາວິດທີ່ຢູ່ໃນພຣະວິຫານຂອງພຣະເຈົ້າໃຫ້ຜູ້ບັງຄັບບັນຊາກອງຮ້ອຍ.
10ເຢໂຮຢາດາໄດ້ຕັ້ງທະຫານທັງຫມົດ, ໃຫ້ອ້ອມກະສັດໄວ້ ທຸກຄົນຖືອາວຸດຕັ້ງແຕ່ດ້ານຂວາຂອງພຣະວິຫານຮອດດ້ານຊ້າຍຂອງພຣະວິຫານ,
ຮອບແທ່ນບູຊາ ແລະ ພຣະວິຫານ.11ແລ້ວພວກເຂົານຳລູກຊາຍຂອງກະສັດອອກມາ, ແລະ ສຸບມົງກຸດໃຫ້ພະອົງ ມອບພະໂອວາດໃຫ້ແກ່ພະອົງ.
ຕັ້ງພະອົງໄວ້ເປັນກະສັດ, ແລະ ເຢໂຮຢາດາກັບລູກຊາຍຂອງເພິ່ນກໍເຈີມພະອົງ, ແລະຮ້ອງວ່າ, “ຂໍກະສັດຊົງພະຈະເຣີນ.”
12ເມື່ອອາທາລີຢາໄດ້ຍິນສຽງປະຊາຊົນແລ່ນ ແລະສັນຣະເສີນກະສັດ, ພະນາງກໍສະເດັດເຂົ້າໄປຫາປະຊາຊົນໃນພຣະວິຫານຂອງພຣະຢາເວ.
13ແລະ ເມື່ອພະນາງທອດພະເນດ ເບິ່ງແມ, ມີກະສັດປຣະທັບຢືນຢູ່ທີ່ເສົາຂອງພະອົງຊື່ທາງເຂົ້າ, ແລະ ບັນດາຜູ້ບັງຄັບກອງທັບ ແລະ
ທະຫານເປົ່າແກກໍຢູ່ຂ້າງກະສັດ. ປະຊາຊົນທັງປວງ ແຫ່ງແຜ່ນດິນ ກໍຊົມຊື່ນຍິນດີ ແລະ ເປົ່າແກ,
ບັນດານັກຮ້ອງພ້ອມກັບເຄື່ອງດົນຕຣີຂອງພວກເຂົາກໍນຳການສັນຣະເສີນ. ພະນາງອາທາລີຢາກໍຈີກເສື້ອຜ້າຂອງພະນາງ ແລະ ຊົງຮ້ອງວ່າ,
“ກະບົດ! ກະບົດ!”
14ປະໂລຫິດເຢໂຮຢາດາ, ຈຶ່ງນຳບັນດານາຍຮ້ອຍຜູ້ບັນຊາການກອງທັບອອກມາ ສັ່ງພວກເຂົາວ່າ,
“ຈົ່ງຄຸມຕົວພະນາງອອກມາລະຫວ່າງແຖວທະຫານ; ຜູ້ໃດທີ່ຕາມພະນາງໄປ, ກໍໃຫ້ປຣະຫານຊີວິດເສຍດ້ວຍດາບ.” ເພາະປະໂລຫິດກ່າວວ່າ,
“ຢ່າປຣະຫານພະນາງໃນພຣະວິຫານຂອງພຣະຢາເວ.”15ດັ່ງນັ້ນພະນາງກໍສະເດັດໄປທີ່ທາງເຂົ້າປະຕູຄອກມ້າໃນພະຣາຊະວັງ,
ແລ້ວຖືກປະຫານເສຍບ່ອນນັ້ນ.
16ເຢໂຮຢາດາໄດ້ເຮັດຄຳຫມັ້ນສັນຍາລະຫວ່າງເພິ່ນເອງ, ກັບປະຊາຊົນທັງປວງ, ແລະ ກະສັດວ່າ,
ພວກເຂົາທັງຫລາຍຈະເປັນປະຊາຊົນຂອງພຣະຢາເວ.17ແລ້ວປະຊາຊົນທັງປວງກໍໄປທີ່ວິຫານຂອງພະບາອານ ແລະ ເພື່ອທຳລາຍເສຍ.
ພວກເຂົາໄດ້ທຸບແທ່ນບູຊາກັບຮູບເຄົາຣົບຂອງພະບາອານນັ້ນໃຫ້ເປັນປ່ຽງ, ແລະ ພວກເຂົາປຣະຫານປະໂລຫິດມັດຕານ, ຂອງພະບາອານ,
ເສຍຕໍ່ຫນ້າແທ່ນບູຊາ.
18ເຢໂຮຢາດາໄດ້ແຕ່ງຕັ້ງເວນຍາມໄວ້ເບິ່ງແຍງພຣະວິຫານຂອງພຣະເຢເວພາຍໃຕ້ການຄວບຄຸມຂອງປະໂລຫິດ, ທີ່ເປັນຄົນເລວີ,
ຜູ້ທີ່ດາວິດຊົງຈັດຕັ້ງໃຫ້ເບິ່ງແຍງພຣະວິຫານຂອງພຣະຢາເວ, ໃຫ້ຖວາຍເຄື່ອງເຜົາບູຊາແກ່ພຣະຢາເວ,
ຕາມທີ່ບັນທຶກໄວ້ໃນພຣະບັນຍັດຂອງໂມເຊ, ດ້ວຍຄວາມຊົມຊື່ນຍິນດີ ແລະການຮ້ອງເພງ, ຕາມຄຳສັ່ງຂອງດາວິດ.
19ເຢໂຮຢາດາໄດ້ຕັ້ງຜູ້ເຝົ້າປະຕູໄວ້ທີ່ປະຕູຮົ້ວພຣະວິຫານຂອງພຣະຢາເວ, ເພື່ອບໍ່ໃຫ້ຜູ້ມີມົນທິນດ້ວຍປະການຫນຶ່ງປະການໃດເຂົ້າໄປ.
20ເຢໂຮຢາດາໄດ້ນຳຜູ້ບັງຄັບກອງຮ້ອຍ, ຂ້າຣາຊະການ, ຜູ້ປົກຄອງປະຊາຊົນ, ແລະ ບັນດາປະຊາຊົນແຫ່ງແຜ່ນດິນ.
ໄດ້ເຊີນກະສັດລົງມາຈາກພຣະວິຫານຂອງພຣະຢາເວ; ປະຊາຊົນໄປທາງປະຕູເທິງ ໄປສູ່ພະຣາຊະສຳນັກ ແລະ
ໄດ້ເຊີນກະສັດປະທັບເທິງພະຣາຊະບັນລັງແຫ່ງຣາຊະອານາຈັກ.21ດັ່ງນັ້ນບັນດາປະຊາຊົນແຫ່ງແຜ່ນດິນກໍປິຕິຍິນດີ, ແລະ ເມືອງກໍສະຫງົບງຽບ.
ຫລັງຈາກທີ່ພວກເຂົາໄດ້ປຣະຫານພະນາງອາທາລີຢາເສຍດ້ວຍດາບແລ້ວ.


generated on Tue Jun 17 19:01:42 2025

# 24

[1]ໂຢອາດໄດ້ເລີ່ມປົກຄອງນັ້ນ ພະອົງມີອາຍຸເຈັດປີ; ພະອົງຊົງປົກຄອງໃນເມືອງເຢຣູຊາເລັມສີ່ສິບປີ. ມານດາຂອງພະອົງຊົງພະນາມວ່າ
ນາງຊີບີຢາ, ແຫ່ງເມືອງເບເອເຊບາ.
[2]ໂຢອາດຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຢາເວຕະຫລອດຊົ່ວອາຍຸຂອງປະໂລຫິດເຢໂຮຢາດາ.
[3]ເຢໂຮຢາດາຫາມະເຫສີໃຫ້ພະອົງສອງອົງ, ແລະ ພະອົງກໍໃຫ້ກຳເນີດລູກຊາຍ ແລະ ລູກສາວຫລາຍອົງ.

[4]ຕໍ່ມາພາຍຫລັງ, ໂຢອາດຊົງຕັ້ງພະທັຍທີ່ຈະສ້ອມແປງພຣະວິຫານຂອງພຣະຢາເວ.[5]ພະອົງຊົງປະຊຸມປະໂລຫິດ ແລະ ຄົນເລວີ, ແລະ
ໂດຍກ່າວກັບພວກເຂົາວ່າ, "ຈົ່ງອອກໄປຕາມຫົວເມືອງຢູດາ ແລະ ເກັບເງິນຈາກອິສະຣາເອນທັງປວງ
ເພື່ອສ້ອມແປງພຣະວິຫານຂອງພຣະເຈົ້າຂອງເຈົ້າເປັນປີໄປ. ຈົ່ງຮີບເຮັດວຽກນັ້ນ." ແຕ່ຄົນເລວີບໍ່ເລັ່ງເຮັດວຽກ.
[6]ດັ່ງນັ້ນກະສັດຈຶ່ງເອີ້ນເຢໂຮຢາດາ, ຜູ້ເປັນຫົວຫນ້າ, ແລະກ່າວກັບເພິ່ນວ່າ,
"ເຫດໃດທ່ານບໍ່ຮຽກຮ້ອງໃຫ້ຄົນເລວີນຳເງິນເສຍສ່ວຍເຂົ້າມາຈາກຢູດາ ແລະ ເຢຣູຊາເລັມຊຶ່ງໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າກຳນົດໄວ້
ໃຫ້ຊຸມນຸມຊົນອິສະຣາເອນ, ນຳມາເພື່ອຫໍເຕັນພຣະໂອວາດ?"[7]ເພາະບັນດາລູກຊາຍຂອງພະນາງອາທາລີຢາ, ຍິງຜູ້ຊົ່ວຮ້າຍ,
ຄົນນັ້ນໄດ້ປຸ້ນພຣະວິຫານຂອງພຣະເຈົ້າ ແລະ ໄດ້ເອົາສິ່ງຂອງທີ່ມອບຖວາຍທັງຫມົດຂອງພຣະວິຫານຂອງພຣະຢາເວມອບໃຫ້ແກ່ພະບາອານ.
[8]ດັ່ງນັ້ນກະສັດຈຶ່ງຊົງບັນຊາ, ແລະ ພວກເຂົາໃຫ້ເຮັດຫີບຫນ່ວຍຫນຶ່ງວາງໄວ້ນອກປະຕູພຣະວິຫານຂອງພຣະຢາເວ.
[9]ແລ້ວມີຄຳປະກາດໄປທົ່ວຢູດາ ແລະ ເຢຣູຊາເລັມ,
ໃຫ້ເສຍສ່ວຍຕາມທີ່ໂມເຊຜູ້ຮັບໃຊ້ຂອງພຣະເຈົ້າກຳນົດແກ່ອິສະຣາເອນໃນຖິ່ນແຫ້ງແລ້ງກັນດານ ເຂົ້າມາຖວາຍພຣະຢາເວ.
[10]ບັນດາເຈົ້ານາຍທັງຫມົດ ແລະ ປະຊາຊົນທັງປວງກໍປິຕິຍິນດີ ແລະ ນຳຄ່າເສຍສ່ວຍຂອງພວກເຂົາທັງຫລາຍມາປ່ອນລົງໃນຫີບຈົນຄົບ.
[11]ແລະມັນກໍໄດ້ເກີດຂຶ້ນເມື່ອຄົນເລວີນຳຫີບເຂົ້າມາໃຫ້ພະນັກງານຂອງກະສັດເມື່ອໃດ, ແລະ ເມື່ອພວກເຂົາເຫັນວ່າມີເງິນຫລາຍ ເລຂາ ແລະ
ເຈົ້າຫນ້າທີ່ຂອງມະຫາປະໂລຫິດຈະເຂົ້າມາຖອກຫີບອອກ ແລະ ນຳຫີບກັບໄປໄວ້ບ່ອນເກົ່າ ພວກເຂົາເຮັດຢ່າງນີ້ທຸກມື້ ແລະ
ເກັບເງິນໄດ້ເປັນຈຳນວນຫລາຍ.[12]ກະສັດ ແລະ ເຢໂຮຢາດາກໍມອບໃຫ້ແກ່ບັນດາຜູ້ເບິ່ງແຍງກິຈະການຂອງພຣະວິຫານຂອງພຣະຢາເວ.
ຄົນເຫລົ່ານີ້ໄດ້ຈ້າງຊ່າງກໍ່ ແລະ ຊ່າງໄມ້ໃຫ້ສ້ອມແປງພຣະວິຫານຂອງພຣະຢາເວ, ທັງຄົນງານຊ່າງເຫລັກ ແລະ ຊ່າງທອງເຫລືອງ
ໃຫ້ສ້ອມແປງພຣະວິຫານຂອງພຣະຢາເວ.
[13]ດັ່ງນັ້ນບັນດາຄົນທີ່ຮັບຈ້າງເຮັດວຽກຈຶ່ງໄດ້ເຮັດວຽກ ແລະງານສ້ອມແປງກໍດຳເນີນກ້າວຫນ້າໃນມືຂອງພວກເຂົາ;
ພວກເຂົາໄດ້ສ້ອມແປງພຣະວິຫານຂອງພຣະເຈົ້າຕາມຂະຫນາດເດີມ ແລະ ເສີມໃຫ້ແຂງແຮງຂຶ້ນ.[14]ເມື່ອພວກເຂົາໄດ້ເຮັດສຳເລັດແລ້ວ,
ເຂົາກໍນຳເງິນທີ່ເຫລືອຢູ່ມາຕໍ່ຫນ້າພະພັກກະສັດ ແລະ ເຢໂຮຢາດາ. ພວກເຂົາຈຶ່ງເອົາເງິນນັ້ນເຮັດເຄື່ອງໃຊ້ສຳລັບພຣະວິຫານແຫ່ງພຣະຢາເວ,
ຄືເຄື່ອງໃຊ້ສຳລັບການບົວລະບັດ ທັງສຳລັບການຖວາຍເຄື່ອງບູຊາ ແລະ ຖ້ວຍ ແລະ ພາຊະນະຄຳ ແລະ ເງິນ.
ພວກເຂົາໄດ້ຖວາຍເຄື່ອງເຜົາບູຊາໃນພຣະວິຫານຂອງພຣະຢາເວຕະຫລອດຊົ່ວອາຍຸຂອງເຢໂຮຢາດາ.
[15]ເຢໂຮຢາດາເຖົ້າແກ່ຫລາຍແລ້ວ, ກໍສິ້ນຊີວິດ; ເມື່ອສິ້ນຊີວິດນັ້ນເພິ່ນມີອາຍຸ 130 ປີ.
[16]ພວກເຂົາກໍຝັງສົບເພິ່ນໄວ້ໃນນະຄອນຂອງດາວິດທ່າມກາງບັນດາກະສັດ, ເພາະເພິ່ນໄດ້ກະທຳການດີໃນອິສະຣາເອນ, ຕໍ່ພຣະເຈົ້າ,
ແລະພຣະວິຫານຂອງພຣະອົງ.
[17]ບັດນີ້ຫລັງຈາກທີ່ເຢໂຮຢາດາສິ້ນຊີວິດແລ້ວ, ບັນດາເຈົ້ານາຍແຫ່ງຢູດາໄດ້ເຂົ້າມາຖວາຍບັງຄົມຕໍ່ກະສັດ.
ແລ້ວກະສັດຊົງຟັງຄຳທູນຂອງພວກເຂົາ.[18]ພວກເຂົາໄດ້ປະຖິ້ມພຣະວິຫານຂອງພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ,
ແລະບົວລະບັດບັນດາເສົາຮູບເຄົາຣົບ ແລະ ຮູບເຄົາຣົບ. ພຣະພິໂຣດໄດ້ລົງມາເຫນືອຢູດາ ແລະ ເຢຣູຊາເລັມ ເພາະບາບຂອງພວກເຂົາ.
[19]ແຕ່ພຣະອົງຍັງຊົງໃຊ້ຜູ້ທຳນວາຍມາທ່າມກາງພວກເຂົາເພື່ອຈະນຳພວກເຂົາໃຫ້ກັບມາຫາພຣະຢາເວ; ຄົນເຫລົ່ານີ້ເປັນພະຍານຕໍ່ສູ້ພວກເຂົາ,
ແຕ່ພວກເຂົາກໍບໍ່ຍອມຫງ່ຽງຫູຟັງ.
[20]ພຣະວິນຍານຂອງພຣະເຈົ້າໄດ້ສວມທັບເຊຄາຣີຢາລູກຊາຍເຢໂຮຢາດາ, ປະໂລຫິດ; ເພິ່ນຢືນຢູ່ເຫນືອປະຊາຊົນ ແລະ ກ່າວແກ່ພວກເຂົາວ່າ,
"ພຣະເຈົ້າກ່າວດັ່ງນີ້ວ່າ 'ເປັນຫຍັງທ່ານທັງຫລາຍຈຶ່ງລະເມີດພຣະບັນຍັດຂອງພຣະຢາເວ, ອັນເປັນເຫດໃຫ້ທ່ານຈະເຣີນຂຶ້ນບໍ່ໄດ້?'
ເພາະທ່ານທັງຫລາຍໄດ້ປະຖິ້ມພຣະຢາເວ, ພຣະອົງຈຶ່ງປະຖິ້ມທ່ານ."[21]ພວກເຂົາທັງຫລາຍຄິດຮ້າຍຕໍ່ເຊຄາຣີຢາ; ແລະ
ໂດຍຄຳບັນຊາຂອງກະສັດ, ພວກເຂົາຈຶ່ງແກວ່ງຫີນໃສ່ເພິ່ນໃນເດີ່ນພຣະວິຫານຂອງພຣະຜູ້ຢາເວ.[22]ດັ່ງນີ້ແຫລະ, ກະສັດ,
ໂຢອາດຈຶ່ງບໍ່ໄດ້ຊົງລະນຶກເຖິງຄວາມກະຣຸນາທີ່ເຢໂຮຢາດາ, ບິດາຂອງເຊຄາຣີຢາ, ໄດ້ສະແດງຕໍ່ພະອົງ.
ແຕ່ໄດ້ຊົງປະຫານລູກຊາຍຂອງເພິ່ນເສຍ. ເມື່ອພວກເຂົາກຳລັງຈະຕາຍ, ພວກເຂົາເວົ້າວ່າ, "ຂໍພຣະຢາເວຊົງທອດພຣະເນດ
ແລະແກ້ແຄ້ນແທນ."
[23]ຕໍ່ມາເມື່ອຮອດທ້າຍປີ, ກອງທັບຂອງຄົນຊີເຣຍກໍມາຕໍ່ສູ້ກັບໂຢອາດ. ພວກເຂົາມາຮອດຢູດາ ແລະ ເຢຣູຊາເລັມ;
ແລ້ວໄດ້ທຳລາຍບັນດາເຈົ້ານາຍຂອງປະຊາຊົນຈາກຫມູ່ປະຊາຊົນ ແລະ ສົ່ງເຄື່ອງທີ່ຍຶດໄດ້ທັງຫມົດໄປໃຫ້ກະສັດແຫ່ງດາມາເຊ.
[24]ເຖິງວ່າກອງທັບຄົນຊີເຣຍມາແຕ່ຫນ້ອຍຄົນ, ພຣະຢາເວຊົງມອບກອງທັບໃຫຍ່ໄວ້ໃນມືຂອງພວກເຂົາ, ເພາະຢູດາໄດ້ປະຖິ້ມພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ. ດັ່ງນີ້ແຫລະ ຄົນຊີເຣຍຈຶ່ງໄດ້ລົງໂທດໂຢອາດ.
[25]ໃນເວລາເມື່ອງຄົນຊີເຣຍພວກເຂົາຈາກພະອົງໄປ, ໂຢອາດໄດ້ຊົງບາດເຈັບ. ຂ້າຣາຊະການຂອງພະອົງ ກໍຄິດຮ້າຍຕໍ່ພະອົງ
ເພາະເລືອດຂອງລູກຊາຍເຢໂຮຢາດາ, ປະໂລຫິດ. ພວກເຂົາໄດ້ປຣະຫານພະອົງເສຍທີ່ເທິງຕຽງນອນ ພະອົງກໍສິ້ນພະຊົນ
ພວກເຂົາຝັງພະສົບໄວ້ໃນນະຄອນດາວິດ, ແຕ່ບໍ່ໄດ້ຝັງພະສົບໄວ້ໃນຂຸມຝັງສົບຂອງບັນດາກະສັດ.[26]ຄົນເຫລົ່ານັ້ນທີ່ຄິດຮ້າຍຕໍ່ພະອົງຄື
ຊາບາດລູກຊາຍນາງຊີເມອາດຄົນອຳໂມນ, ແລະເຢໂຮຊາບັດລູກຊາຍນາງຊິມຣິດ, ຄົນໂມອາບ.
[27]ບັດນີ້ເລື່ອງລາວແຫ່ງລູກຊາຍຂອງພະອົງ, ພາຣະອັນຫນັກໃຫຍ່ຫລວງທີ່ຕົກຢູ່ແກ່ພະອົງ, ແລະ ການສ້ອມແປງພຣະວິຫານຂອງພຣະເຈົ້າ,
ກໍມີບັນທຶກໄວ້ໃນຫນັງສືເລື່ອງລາວຂອງກະສັດ ແລະອາມາຊີຢາລູກຊາຍຂອງພະອົງ, ຂຶ້ນປົກຄອງແທນພະອົງ.

25 [1]ອາມາຊີຢາເລີ່ມປົກຄອງນັ້ນ ພະອົງມີອາຍຸຊາວຫ້າປີ; ພະອົງຊົງປົກຄອງໃນເຢຣູຊາເລັມຊາວເກົ້າປີ. ພະມານດາຂອງພະອົງຊົງພະນາມວ່າ
ເຢໂຮອັດດັນ, ຊາວເຢຣູຊາເລັມ;[2]ພະອົງຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ, ແຕ່ບໍ່ແມ່ນດ້ວຍພະທັຍທີ່ແທ້ຈິງ.

[3]ຢູ່ມາພໍຣາຊະອານາຈັກຢູ່ໃນພະຫັດຂອງພະອົງຢ່າງຫມັ້ນຄົງແລ້ວ, ພະອົງຊົງປະຫານຊີວິດຂ້າຣາຊະການຂອງພະອົງ, ຜູ້ທີ່ຂ້າບິດາຂອງພະອົງ.
[4]ແຕ່ພະອົງບໍ່ໄດ້ຊົງປະຫານຊີວິດລູກຫລານຂອງພວກເຂົາ, ແຕ່ໄດ້ຊົງກະທຳຕາມທີ່ມີບັນທຶກໄວ້ໃນຫນັງສືພຣະບັນຍັດຂອງໂມເຊ,
ທີ່ພຣະຢາເວຊົງບັນຊາໄວ້ນັ້ນວ່າ, “ຢ່າໃຫ້ພໍ່ຕ້ອງຮັບໂທດເຖິງຕາຍແທນລູກຂອງຕົນ, ຫລືໃຫ້ລູກຕ້ອງຮັບໂທດເຖິງຕາຍແທນພໍ່ຂອງຕົນ, ແຕ່
ໃຫ້ທຸກຄົນຮັບໂທດເຖິງຕາຍເນື່ອງດ້ວຍບາບຂອງຄົນນັ້ນເອງ.”
[5]ນອກຈາກນັ້ນ, ອາມາຊີຢາໄດ້ປະຊຸມພວກຢູດາ, ແລະ ໃຫ້ພວກເຂົາຢູ່ພາຍໃຕ້ຜູ້ບັງຄັບກອງພັນ, ແລະຜູ້ບັງຄັບກອງຮ້ອຍ
ຕາມເຮືອນບັນພະບຸຣຸດຂອງຕົນ—ຄື ຢູດາ ແລະ ເບັນຢາມິນທັງຫມົດ. ພະອົງໄດ້ຊົງນັບຄົນທີ່ມີອາຍຸຊາວປີຂຶ້ນໄປ ແລະ
ຊົງເຫັນວ່າມີຊາຍຫນຸ່ມສາມແສນຄົນ, ສາມາດເຂົ້າເຮັດສົງຄາມ, ສາມາດຖືຫອກ ແລະ ໂລ່.
[6]ພະອົງຊົງຈ້າງທະຫານທີ່ເກັ່ງກ້າຈາກອິສະຣາເອນຫນຶ່ງແສນຄົນເປັນເງິນຫນຶ່ງຮ້ອຍຕະລັນຕົນ.
[7]ແຕ່ຄົນຂອງພຣະເຈົ້າຄົນຫນຶ່ງມາເຝົ້າພະອົງທູນວ່າ, “ຂ້າແດ່ກະສັດ, ຂໍຢ່າໃຫ້ກອງທັບອິສະຣາເອນໄປກັບພະອົງ,
ເພາະພຣະຢາເວບໍ່ໄດ້ຊົງສະຖິດຢູ່ກັບອິສະຣາເອນ—ຄືກັບຄົນເອຟຣາຢິມເຫລົ່ານີ້ທັງຫມົດ.[8]ແຕ່ຖ້າພະອົງຄາດຫມາຍວ່າໂດຍວິທີນີ້
ພະອົງຈະເຂັ້ມແຂງພໍທີ່ຈະເຂົ້າສົງຄາມ, ພຣະເຈົ້າຈະຊົງແກວ່ງພະອົງລົງຕໍ່ຫນ້າສັດຕຣູ, ເພາະວ່າພຣະເຈົ້າຊົງຣິດທີ່ຈະຊ່ວຍໄວ້ ຫລືຖິ້ມໄປໄດ້.”
[9]ອາມາຊີຢາກ່າວກັບຄົນຂອງພຣະເຈົ້າວ່າ,
“ແຕ່ເຮົາຈະເຮັດປະການໃດໃນເລື່ອງເງິນຫນຶ່ງຮ້ອຍຕະລັນຕົນຊຶ່ງເຮົາໄດ້ໃຫ້ແກ່ກອງທັບອິສະຣາເອນໄປແລ້ວນັ້ນ?”
ແລ້ວຄົນຂອງພຣະເຈົ້າທູນຕອບວ່າ,
“ພຣະຢາເວຊົງສາມາດທີ່ຈະປຣະທານແກ່ພະອົງຫລາຍກວ່ານີ້ອີກຫລາຍເທົ່າ.”[10]ດັ່ງນັ້ນອາມາຊີຢາກໍຊົງປົດປ່ອຍກອງທັບຊຶ່ງມາຫາພະອົງຈາກເອຟຣາຢິມ;
ໃຫ້ກັບໄປເຮືອນອີກ. ພວກເຂົາຈຶ່ງຮ້າຍຢູດາຫລາຍ ແລະ ໄດ້ກັບເຮືອນດ້ວຍຄວາມໂກດຮ້າຍ ຢ່າງຮຸນແຮງ.
[11]ອາມາຊີຢາຊົງກ້າແຂງຂຶ້ນ ແລະ ຊົງນຳທະຫານຂອງພະອົງອອກໄປຍັງພູເຂົາເກືອ; ທີ່ນັ້ນພະອົງໄດ້ໂຈມຕີຊະນະຄົນເສອີຫນຶ່ງຫມື່ນຄົນ.
[12]ຄົນຢູດາຈັບເປັນໄດ້ຫນຶ່ງຫມື່ນຄົນ ແລະພາພວກເຂົາໄປທີ່ຈອມຜາ ແລະ ໄດ້ໂຍນພວກເຂົາມາຈາກຍອດຫນ້າຜາ ແລະຖິ້ມລົງເຫວນັ້ນ,
ດັ່ງນັ້ນພວກເຂົາກໍຕົກລົງມຸ່ນເປັນຕ່ອນ.
[13]ແຕ່ຄົນຂອງກອງທັບຊຶ່ງອາມາຊີຢາຊົງປົດໃຫ້ກັບໄປ, ແລະບໍ່ໃຫ້ໄປຮົບດ້ວຍນັ້ນ, ພວກເຂົາລ້າຖອຍເຂົ້າໂຈມຕີຫົວເມືອງຂອງຢູດາ
ຕັ້ງແຕ່ຊາມາເຣຍເຖິງເບັດໂຮໂຣນ. ຂ້າປະຊາຊົນສາມພັນຄົນ ແລະ ຍຶດສິ່ງຂອງໄປເປັນຈຳນວນຫລາຍ.
[14]ຢູ່ມາ, ເມື່ອອາມາຊີຢາສະເດັດກັບຈາກການຂ້າຟັນຄົນເອໂດມ, ພະອົງຊົງນຳຮູບເຄົາຣົບຂອງຊາວເສອີມາຕັ້ງໄວ້ເປັນພະຂອງພະອົງ, ແລະ
ກາບນະມັສະການພະເຫລົ່ານັ້ນ. ຊົງເຜົາເຄື່ອງຫອມຖວາຍ.[15]ເພາະສະນັ້ນ ພຣະຢາເວຊົງຮ້າຍຕໍ່ອາມາຊີຢາ.
ພະອົງຊົງໃຊ້ຜູ້ທຳນວາຍຄົນຫນຶ່ງໄປຫາ, ທູນພະອົງວ່າ, “ເປັນຫຍັງເຈົ້າຈຶ່ງສະແຫວງຫາພະຂອງຊົນຊາດຫນຶ່ງ
ຊຶ່ງບໍ່ສາມາດຊ່ວຍຊົນຊາດຂອງຕົນເອງໃຫ້ພົ້ນຈາກມືຂອງເຈົ້າໄດ້?”
[16]ຢູ່ມາຂະນະທີ່ລາວກຳລັງທູນຢູ່ ກະສັດກ່າວກັບລາວວ່າ, “ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນທີ່ປຶກສາຂອງກະສັດຫລື? ຢຸດ!
ເປັນຫຍັງເຈົ້າຈະຕ້ອງຕາຍ?” ຜູ້ທຳນວາຍນັ້ນຈຶ່ງຢຸດ ແຕ່ທູນວ່າ, “ຂ້າພະອົງຮູ້ວ່າພຣະເຈົ້າຊົງຕັ້ງພຣະທັຍຈະທຳລາຍພະອົງ
ເພາະພະອົງຊົງກະທຳເຊັ່ນນີ້ ແລະ ບໍ່ໄດ້ຊົງຟັງຄຳປຶກສາຂອງຂ້າພະອົງ.”
[17]ອາມາຊີຢາກະສັດແຫ່ງຢູດາໄດ້ຊົງຮັບຄຳປຶກສາ ແລະ ຊົງໃຊ້ໃຫ້ໄປເຝົ້າໂຢອາດລູກຊາຍຂອງເຢໂຮອາຮາດ ລູກຊາຍຂອງເຢຮູ
ກະສັດຂອງອິສະຣາເອນ, ທູນວ່າ, “ມາແມ, ໃຫ້ເຮົາທັງສອງມາຜະເຊີນຫນ້າກັນຕໍ່ຫນ້າໃນສົງຄາມ.”
[18]ແຕ່ໂຢອາດກະສັດແຫ່ງອິສະຣາເອນຊົງໃຊ້ໄປຍັງອາມາຊີຢາກະສັດແຫ່ງຢູດາ, ກ່າວວ່າ,
“ຕົ້ນຜັກຫນາມເທິງເລບານອນສົ່ງຂ່າວໄປຫາຕົ້ນສົນເທິງເລບານອນ, ກ່າວວ່າ, ‘ຈົ່ງຍົກລູກສາວຂອງເຈົ້າໃຫ້ເປັນເມຍລູກຊາຍຂອງເຮົາ,’
ແຕ່ສັດປ່າໂຕຫນຶ່ງແຫ່ງເລບານອນຜ່ານມາ ຢຽບຕົ້ນຜັກຫນາມລົງເສຍ.[19]ທ່ານໄດ້ກ່າວວ່າ, ‘ເບິ່ງແມ, ຂ້າພະເຈົ້າໄດ້ໂຈມຕີເອໂດມ,’ ແລະ
ຈິດໃຈຂອງທ່ານກໍຈອງຫອງຂຶ້ນໃນຄວາມໂອ້ອວດ. ພູມໃຈໃນຊັຍຊະນະຂອງທ່ານ, ແຕ່ຈົ່ງຢູ່ກັບເຮືອນເຖີດ,
ເພາະເຫດໃດທ່ານຈຶ່ງເລົ້າໃຈຕົນເອງໃຫ້ຕໍ່ສູ້ ແລະ ຮັບອັນຕະຣາຍ ອັນຈະໃຫ້ທ່ານລົ້ມລົງ, ທັງທ່ານ ແລະ ຢູດາ?”
[20]ແຕ່ອາມາຊີຢາບໍ່ຊົງຟັງ, ເພາະເປັນມາຈາກພຣະເຈົ້າ, ເພື່ອວ່າພະອົງຈະຊົງມອບພວກເຂົາທັງຫລາຍໄວ້ໃນມືຂອງສັດຕຣູ,
ເພາະພວກເຂົາໄດ້ຊອກຫາພະແຫ່ງເອໂດມ.[21]ດັ່ງນັ້ນໂຢອາດ, ກະສັດແຫ່ງອິສະຣາເອນ, ຈຶ່ງໄດ້ໂຈມຕີ,
ພະອົງກັບອາມາຊິກະສັດແຫ່ງຢູດາໄດ້ຜະເຊີນຫນ້າກັນທີ່ເບັດເຊເມັດ ຊຶ່ງເປັນຂອງຢູດາ.[22]ຢູດາກໍພ່າຍແພ້ອິສະຣາເອນ ແລະ
ທຸກຄົນກໍຫນີກັບໄປເຕັນຂອງຕົນ.
[23]ໂຢອາດ, ກະສັດແຫ່ງອິສະຣາເອນ, ຊົງຈັບອາມາຊີຢາກະສັດແຫ່ງຢູດາລູກຊາຍຂອງໂຢອາດ ລູກຊາຍຂອງເຢໂຮອາຮາດທີ່ເບັດເຊເມັດ.
ພະອົງໄດ້ຊົງນຳພະອົງມາຍັງເຢຣູຊາເລັມ ຊົງທຳລາຍກຳແພງເຢຣູຊາເລັມລົງສີ່ຮ້ອຍສອກ ຕັ້ງແຕ່ປະຕູເອຟຣາຢິມເຖິງປະຕູແຈ.[24]ເງິນທັງຫມົດ
ທັງເຄື່ອງໃຊ້ທັງຫມົດຊຶ່ງພົບໃນພຣະວິຫານຂອງພຣະເຈົ້າໃນຄວາມຮັກສາຂອງໂອເບັດເອໂດມ, ທັງຄັງຊັບຂອງສຳນັກພະຣາຊະວັງ
ພ້ອມກັບຄົນປະກັນດ້ວຍ, ແລະ ພະອົງສະເດັດກັບໄປຍັງຊາມາເຣຍ.
[25]ອາມາຊີຢາ ລູກຊາຍຂອງໂຢອາດ, ກະສັດແຫ່ງຢູດາ, ຊົງພະຊົນຢູ່ສິບຫ້າປີ ຫລັງຈາກການສະຫວັນນະຄົດຂອງໂຢອາດ,
ລູກຊາຍຂອງເຢໂຮອາຮາດ, ກະສັດແຫ່ງອິສະຣາເອນ.[26]ສ່ວນພະຣາຊະກິດນອກນັ້ນຂອງອາມາຊີຢາ, ຕັ້ງແຕ່ຕົ້ນຈົນຈົບ,
ກໍໄດ້ບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງຢູດາ ແລະ ອິສະຣາເອນ?
[27]ນັບແຕ່ເວລາທີ່ອາມາຊີຢາຊົງຫັນໄປຈາກການຕິດຕາມພຣະຢາເວ, ພວກເຂົາທັງຫລາຍກໍຄິດກະບົດ ຕໍ່ພະອົງໃນເຢຣູຊາເລັມ.
ພະອົງຊົງຫນີໄປທີ່ລາກິດ, ແຕ່ພວກເຂົາໄປຕາມພະອົງທີ່ລາກິດ ແລະ ປຣະຫານພະອົງເສຍບ່ອນນັ້ນ.[28]ພວກເຂົານຳພະສົບໃສ່ຫລັງມ້າກັບມາ
ແລະ ຝັງໄວ້ກັບບັນພະບຸຣຸດຂອງພະອົງໃນເມືອງແຫ່ງຢູດາ.


generated on Tue Jun 17 19:01:42 2025

26 [1]ປະຊາຊົນທັງຫມົດແຫ່ງຢູດາຈຶ່ງຕັ້ງອຸດຊີຢາ, ຜູ້ຊຶ່ງມີອາຍຸສິບຫົກປີ, ແລະ ໃຫ້ເປັນກະສັດແທນອາມາຊີຢາບິດາຂອງພະອົງ.
[2]ພະອົງຊົງສ້າງເມືອງເອລັດ ແລະ ໃຫ້ກັບຄືນແກ່ຢູດາ. ຫລັງຈາກທີ່ກະສັດຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ.
[3]ເມື່ອອຸດຊີຢາຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸສິບຫົກປີ. ພະອົງຊົງປົກຄອງໃນເມືອງເຢຣູຊາເລັມຫ້າສິບສອງປີ.
ພະມານດາຂອງພະອົງຊົງພະນາມວ່າ ເຢໂກລີຢາຊາວເຢຣູຊາເລັມ.

[4]ພະອົງຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ, ຕາມທີ່ອາມາຊີຢາ ບິດາຂອງພະອົງໄດ້ຊົງກະທຳທຸກປະການ.
[5]ພະອົງຊົງສະແຫວງຫາພຣະເຈົ້າໃນສະໄຫມຂອງເຊຄາຣີຢາ, ຜູ້ເຂົ້າໃຈໃນນິມິດຕ່າງຈາກພຣະເຈົ້າ.
ຕາບໃດທີ່ພະອົງສະແຫວງຫາພຣະຢາເວ, ພຣະເຈົ້າກໍຊົງກະທຳໃຫ້ພະອົງຈະເຣີນ.
[6]ອຸດຊີຢາສະເດັດອອກໄປເຮັດສົງຄາມຕໍ່ສູ້ກັບຄົນຟີລິສະຕິນ. ພະອົງໄດ້ຊົງພັງກຳແພງເມືອງກັດ, ກຳແພງເມືອງຢັບເນ, ແລະ
ກຳແພງເມືອງອາຊະໂດດ; ພະອົງຊົງສ້າງຫົວເມືອງໃນເຂດແດນອາຊະໂດດ ແລະ ບ່ອນອື່ນອີກທ່າມກາງຄົນຟີລິສະຕິນ.
[7-8]ພຣະເຈົ້າຊົງຊ່ວຍພະອົງໃນການຕໍ່ສູ້ຄົນຟີລິສະຕິນ, ຕໍ່ສູ້ຄົນອາຫລັບທີ່ອາສັຍຢູ່ໃນກູເຣບາອານ, ແລະ ຕໍ່ສູ້ກັບຄົນເມອູນິມ.
ຄົນອຳໂມນໄດ້ຖວາຍບັນນາການແກ່ອຸດຊີຢາ, ແລະ ພະນາມຂອງພະອົງກໍແຜ່ອອກໄປເຖິງເຂດແດນເອຢິບ,
ເພາະພະອົງຊົງເຂັ້ມແຂງຂຶ້ນຫລາຍ.
[9]ຫລາຍກວ່ານັ້ນອີກ, ອຸດຊີຢາຊົງສ້າງປ້ອມໃນເຢຣູຊາເລັມທີ່ປະຕູແຈ, ທີ່ປະຕູພູເຂົາ, ແລະ ບ່ອນກຳແພງໂຄ້ງຢ່າງແຂງແຮງ ແລະ
ປ້ອງກັນປ້ອມເຫລົ່ານັ້ນ.[10]ພະອົງຊົງສ້າງປ້ອມໃນຖິ່ນແຫ້ງແລ້ງກັນດານ ແລະ ຊົງຂຸດນ້ຳສ້າງຫລາຍແຫ່ງ, ເພາະພະອົງຊົງມີຝູງສັດໃຫຍ່,
ທັງໃນພູເຂົາ ແລະ ໃນທົ່ງພຽງ. ພະອົງໄດ້ຊົງມີຊາວນາ ແລະ ຄົນຕັດແຕ່ງຕົ້ນອະງຸ່ນໃນໂນນພູໃນກາເມນ ແລະ ໃນທົ່ງນາທີ່ອຸດົມສົມບູນ,
ເພາະພະອົງຊົງຮັກການກະເສດຫລາຍ.
[11]ຫລາຍກວ່ານັ້ນອີກ, ອຸດຊີຢາຊົງມີກອງທະຫານທີ່ອອກໄປເຮັດເສິກເປັນກອງຕາມຈຳນວນທີ່ເຢອີເອນເລຂາໄດ້ຮວບຮວມໄວ້ນຳກັນ
ກັບມາອາເສຢາ, ເຈົ້າຫນ້າທີ່ພາຍໃຕ້ການຄວບຄຸມຂອງຮານານີຢາ, ຜູ້ບັງຄັບກອງທະຫານຄົນຫນຶ່ງຂອງກະສັດ.
[12]ຈຳນວນທັງຫມົດຂອງບັນດາຫົວຫນ້າຕະກູນພວກນັກຮົບມີຈຳນວນ2,600ຄົນ.[13]ພາຍໃຕ້ການບັງຄັບບັນຊາຂອງຄົນເຫລົ່ານີ້
ມີກອງທັບທະຫານ 307,500 ຄົນ ຜູ້ເຮັດສົງຄາມໄດ້ດ້ວຍກຳລັງຫລາຍ ເພື່ອຊ່ວຍກະສັດໃຫ້ຕໍ່ສູ້ກັບສັດຕຣູ.
[14]ອຸດຊີຢາຊົງຕຽມ—ໂລ່, ຫອກ, ຫມວກເຫລັກ, ເສື້ອເກາະ, ທະນູ, ແລະ ກ້ອນຫີນສຳລັບສະຫລິງໄວ້ໃຫ້—ກອງທັບ.[15]ໃນເຢຣູຊາເລັມ
ພະອົງຊົງເຮັດເຄື່ອງກົນໄກໂດຍຄົນຊ່າງປະດິດ, ເຮັດຂຶ້ນໄວ້ເທິງປ້ອມ ແລະ ຕາມແຈ, ເພື່ອຍິງລູກທະນູ ແລະ ໂຍນກ້ອນຫີນໃຫຍ່.
ພະນາມຂອງພະອົງກໍຊ່າລືໄປຍັງບັນດາແຜ່ນດິນໄກ, ເພາະພະອົງຊົງໄດ້ຮັບຄວາມຊ່ວຍເຫລືອຢ່າງອັສະຈັນຈົນພະອົງເຂັ້ມແຂງ.
[16]ແຕ່ເມື່ອພະອົງຊົງແຂງແຮງແລ້ວ, ພະອົງກໍມີພະທັຍຈອງຫອງຂຶ້ນ ຈຶ່ງຊົງກະທຳຄວາມເສຍຫາຍ; ເພາະພະອົງລະເມີດຕໍ່ພຣະຢາເວ,
ພຣະເຈົ້າຂອງພະອົງ, ໂດຍເຂົ້າໄປໃນພຣະວິຫານຂອງພຣະຢາເວເພື່ອເຜົາເຄື່ອງຫອມເທິງແທ່ນບູຊາ.[17]ອາຊາຣີຢາ,
ປະໂລຫິດໄດ້ເຂົ້າໄປຕິດຕາມພະອົງພ້ອມກັບປະໂລຫິດຂອງພຣະຢາເວແປດສິບຄົນຜູ້ຊຶ່ງເກັ່ງກ້າ.
[18]ພວກເຂົາທັງຫລາຍໄດ້ຂັດຂວາງກະສັດອຸດຊີຢາ ແລະ ທູນພະອົງວ່າ, “ຂ້າແດ່ອຸດຊີຢາ
ບໍ່ແມ່ນຫນ້າທີ່ຂອງພະອົງທີ່ຈະເຜົາເຄື່ອງຫອມຖວາຍແດ່ພຣະຢາເວ, ແຕ່ເປັນຫນ້າທີ່ຂອງປະໂລຫິດລູກຫລານຂອງອາໂຣນ,
ຜູ້ຊຶ່ງຊຳຣະໄວ້ໃຫ້ບໍຣິສຸດ ເພື່ອເຜົາເຄື່ອງຫອມ. ຂໍເຊີນພະອົງສະເດັດອອກໄປຈາກສະຖານທີ່ບໍຣິສຸດນີ້, ເພາະພະອົງໄດ້ຊົງລ່ວງເກີນ ແລະ
ຈະບໍ່ໄດ້ຮັບກຽຕອັນໃດຈາກພຣະຢາເວພຣະເຈົ້າເລີຍ.”
[19]ແລ້ວອຸດຊີຢາຊົງຮ້າຍ. ພະອົງມີກະຖາງໄຟຢູ່ໃນພຣະຫັດຈະຊົງເຜົາເຄື່ອງຫອມ. ເມື່ອພະອົງຊົງຮ້າຍຕໍ່ພວກປະໂລຫິດ,
ພະຍາດຂີ້ທູດກໍເກີດຂຶ້ນມາທີ່ຫນ້າຜາກຂອງພະອົງຕໍ່ຫນ້າປະໂລຫິດໃນພຣະວິຫານຂອງພຣະຢາເວ, ຂ້າງແທ່ນເຜົາເຄື່ອງຫອມ.
[20]ອາຊາຣີຢາປະໂລຫິດໃຫຍ່ ແລະ ບັນດາປະໂລຫິດທັງປວງເບິ່ງພະອົງ, ແລະເບິ່ງແມ, ພະອົງຊົງເປັນພະຍາດຂີ້ທູດທີ່ຫນ້າຜາກ.
ພວກເຂົາທັງຫລາຍຈຶ່ງຊຸກພະອົງອອກໄປຈາກບ່ອນນັ້ນ. ໂດຍແທ້ຈິງ, ພະອົງເອງກໍຊົງຮີບສະເດັດອອກໄປ,
ເພາະວ່າພຣະຢາເວຊົງລົງໂທດພະອົງແລ້ວ.
[21]ກະສັດອຸດຊີຢາຊົງເປັນພະຍາດຂີ້ທູດຈົນມື້ສິ້ນພະຊົນ ແລະເພາະເປັນພະຍາດຂີ້ທູດຈຶ່ງຊົງປຣະທັບໃນວັງຕ່າງຫາກ,
ເພາະພະອົງຊົງຖືກຕັດອອກຈາກພຣະວິຫານຂອງພຣະຢາເວ. ໂຢທາມ, ລູກຊາຍຂອງພະອົງ,
ເປັນຜູ້ເບິ່ງແຍງຣາຊະສຳນັກປົກຄອງປະຊາຊົນແຫ່ງແຜ່ນດິນ.
[22]ສ່ວນພະຣາຊະກິດນອກນັ້ນຂອງອຸດຊີຢາ, ຕັ້ງແຕ່ຕົ້ນຈົນຈົບ, ເອຊາຢາຜູ້ທຳນວາຍ ລູກຊາຍອາໂມດ, ໄດ້ບັນທຶກໄວ້.
[23]ແລະອຸດຊີຢາກໍຊົງລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ;
ພວກເຂົາກໍຝັງພະສົບໄວ້ກັບບັນພະບຸຣຸດຂອງພະອົງໃນນາບ່ອນຝັງສົບອັນເປັນຂອງກະສັດ, ໂດຍກ່າວວ່າ, “ພະອົງຊົງເປັນພະຍາດຂີ້ທູດ.”
ໂຢທາມ, ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

# 27

[1]ເມື່ອໂຢທາມຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸຊາວຫ້າປີ; ພະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ.
ພະມານດາຂອງພະອົງມີພະນາມວ່າ ເຢຣຸຊາ; ລູກສາວຂອງຊາໂດກ.[2]ພະອົງຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ,
ຕາມທີ່ອຸດຊີຢາ ບິດາຂອງພະອົງໄດ້ຊົງກະທຳທຸກປະການ ເວັ້ນແຕ່ພະອົງບໍ່ໄດ້ເຂົ້າໄປໃນພຣະວິຫານຂອງພຣະຢາເວ.
ແຕ່ປະຊາຊົນຍັງປະຕິບັດໃນທາງເສຍຫາຍ.

[3]ພະອົງຊົງສ້າງປະຕູເທິງຂອງພຣະວິຫານແຫ່ງພຣະຢາເວ, ແລະ ຊົງກະທຳການກໍ່ສ້າງຫລາຍບ່ອນທີ່ກຳແພງຕາແສງໂອເຟນ.
[4]ຫລາຍກວ່ານັ້ນອີກ ພະອົງຊົງສ້າງຫົວເມືອງໃນແຖບພູເຂົາແຫ່ງຢູດາ, ແລະ ສ້າງປ້ອມກັບຫໍຄອຍຕາມປ່າໄມ້.
[5]ພະອົງຊົງສູ້ຮົບກັບກະສັດຄົນອຳໂມນ ແລະ ຊົງຊະນະພວກເຂົາ. ໃນປີນັ້ນ, ຄົນອຳໂມນໄດ້ຖວາຍເງິນແກ່ພະອົງຫນຶ່ງຮ້ອຍຕະລັນຕົນ, ແລະ
ເຂົ້າສາລີຫນຶ່ງຫມື່ນ, ງົວກັບເຂົ້າບາເລຫນຶ່ງຫມື່ນ. ຄົນອຳໂມນໄດ້ຖວາຍເທົ່າກັນໃນປີທີສອງ ແລະ ໃນປີທີສາມ.
[6]ດັ່ງນັ້ນໂຢທາມຈຶ່ງຊົງມີກຳລັງຫລາຍຂຶ້ນ ເພາະພະອົງຊົງກະກຽມທາງທັງຫລາຍຂອງພະອົງຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພະອົງ.
[7]ສ່ວນພະຣາຊະກິດນອກນັ້ນຂອງໂຢທາມ, ແລະການສົງຄາມທັງຫມົດຂອງພະອົງ, ກິຈະກຳປະຈຳວັນຂອງພະອົງ
ກໍມີບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງອິສະຣາເອນ ແລະ ຢູດາ.
[8]ເມື່ອພະອົງຊົງເລີ່ມປົກຄອງ ພະອົງມີອາຍຸຊາວຫ້າປີ; ພະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ.
[9]ໂຢທາມລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ, ແລະ ພວກເຂົາຝັງພະສົບໄວ້ໃນນະຄອນດາວິດ. ອາຮາດ, ລູກຊາຍຂອງພະອົງ,
ຂຶ້ນປົກຄອງແທນ.

 generated on Tue Jun 17 19:01:42 2025

28 [1]ອາຮາດຊົງເລີ່ມປົກຄອງ ພະອົງມີອາຍຸຊາວປີ, ແລະ ພະອົງຊົງປົກຄອງໃນເຢຣູຊາເລັມສິບຫົກປີ.
ພະອົງບໍ່ໄດ້ຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ, ຄືກັບດາວິດບັນພະບຸຣຸດຂອງພະອົງ.
[2]ແຕ່ຊົງດຳເນີນຕາມທາງຂອງກະສັດແຫ່ງອິສະຣາເອນ; ພະອົງໄດ້ຊົງສ້າງຮູບເຄົາຣົບສຳລັບບັນດາພະບາອານ.

[3]ນອກຈາກນັ້ນ, ພະອົງໄດ້ຊົງເຜົາເຄື່ອງຫອມທີ່ພູເຂົາລູກຊາຍຂອງຮິນໂນມ ແລະ ຊົງເຜົາບັນດາລູກຊາຍຂອງພະອົງໃນໄຟ,
ຕາມການເຮັດອັນຫນ້າກຽດຊັງຂອງບັນດາປະຊາຊາດ ຊຶ່ງພຣະຢາເວຊົງຂັບໄລ່ອອກໄປເສຍໃຫ້ພົ້ນຫນ້າປະຊາຊົນອິສະຣາເອນ.
[4]ພະອົງຊົງຖວາຍສັດບູຊາ ແລະ ຊົງເຜົາເຄື່ອງຫອມທີ່ປູຊະນີຍະສະຖານສູງ ແລະ ເທິງໂນນພູ ແລະ ກ້ອງຕົ້ນໄມ້ຂຽວສົດທຸກຕົ້ນ.
[5]ເພາະສະນັ້ນ ພຣະຢາເວພຣະເຈົ້າຂອງອາຮາດ, ຈຶ່ງຊົງມອບພະອົງໄວ້ໃນພະຫັດຂອງກະສັດແຫ່ງຊີເຣຍ. ຄົນຊີເຣຍຊະນະພະອົງ ແລະ
ຈັບປະຊາຊົນຂອງພະອົງເປັນຊະເລີຍຈຳນວນຫລາຍ, ນຳມາຍັງດາມາເຊ. ອາຮາດຊົງຖືກມອບໄວ້ໃນພະຫັດຂອງກະສັດແຫ່ງອິສະຣາເອນ
ຜູ້ຊະນະພະອົງດ້ວຍການຂ້າຟັນຢ່າງໃຫຍ່ຫລວງ.[6]ເພາະວ່າເປກາລູກຊາຍເຣມາລີຢາ, ໄດ້ຂ້າ 120,00 ຄົນໃນຢູດາໃນມື້ດຽວ,
ທັງຫມົດເປັນທະຫານເກັ່ງກ້າ, ເພາະພວກເຂົາທັງຫລາຍໄດ້ປະຖິ້ມພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ.
[7]ຊິກຣີ, ທະຫານກ້າຂອງເອຟຣາຢິມໄດ້ສັງຫານມາອາເສຢາລູກຊາຍຂອງກະສັດ, ອັດຊະຣີການຫົວຫນ້າປົກຄອງກົມມະວັງ, ແລະ
ເອນການາຜູ້ຮອງກະສັດ.[8]ຄົນອິສະຣາເອນໄດ້ຈັບຍາດພີ່ນ້ອງຂອງຕົນເປັນຊະເລີຍ 200,000 ຄົນ, ມີຜູ້ຍິງ, ລູກຊາຍ ແລະ ລູກສາວ.
ໄດ້ຍຶດສິ່ງຂອງເປັນຈຳນວນຫລາຍມາຈາກພວກເຂົານຳມາຍັງຊາມາເຣຍ.
[9]ແຕ່ຜູ້ທຳນວາຍຄົນຫນຶ່ງຂອງພຣະຢາເວຢູ່ບ່ອນນັ້ນ, ຊື່ວ່າໂອເດັດ. ເພິ່ນອອກໄປພົບກອງທັບທີ່ມາຊາມາເຣຍ. ພະອົງເວົ້າກັບພວກເຂົາວ່າ,
“ເບິ່ງແມ ເພາະພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງຫລາຍ, ຊົງຮ້າຍຕໍ່ຢູດາ, ພະອົງຊົງມອບພວກເຂົາໄວ້ໃນມືຂອງທ່ານ.
ແຕ່ທ່ານທັງຫລາຍໄດ້ສັງຫານພວກເຂົາເສຍດ້ວຍຄວາມຮ້າຍຊຶ່ງຂຶ້ນໄປເຖິງຟ້າສະຫວັນ.
[10]ບັດນີ້ທ່ານທັງຫລາຍເຈຕະນາຈະຂົ່ມເຫັງປະຊາຊົນແຫ່ງຢູດາເຢຣູຊາເລັມໃຫ້ເປັນຂ້າທາດ ຊາຍ ແລະ ຂ້າທາດຍິງຂອງທ່ານ.
ແຕ່ຕົວທ່ານເອງບໍ່ມີບາບຕໍ່ພຣະຢາເວພຣະເຈົ້າຂອງທ່ານຫລື?[11]ບັດນີ້, ຂໍຟັງຂ້າພະເຈົ້າ:
ແລະຂໍສົ່ງຊະເລີຍຊຶ່ງທ່ານໄດ້ນຳມາຈາກຍາດພີ່ນ້ອງຂອງທ່ານກັບໄປ, ເພາະວ່າພະພິໂຣດອັນແຮງກ້າຂອງພຣະຢາເວຢູ່ເຫນືອທ່ານທັງຫລາຍ.”
[12]ບາງຄົນໃນຫົວຫນ້າຄົນເອຟຣາຢິມ—ຄື ອາຊາຣີຢາລູກຊາຍໂຢຮານານ, ເບເຣກີຢາລູກຊາຍເມຊິນເລໂມດ, ເຢຮີຊະກີຢາລູກຊາຍຊານລູມ,
ແລະ ອາມາສາລູກຊາຍຮັດໄລ, ໄດ້ຢືນຂຶ້ນຂັດຂວາງບັນດາຜູ້ທີ່ກັບມາຈາກສົງຄາມ.[13]ໂດຍເວົ້າກັບພວກເຂົາວ່າ,
“ເຈົ້າຢ່ານຳຊະເລີຍເຂົ້າມາບ່ອນນີ້, ເພາະເຈົ້າມຸ້ງຫມາຍທີ່ຈະນຳໂທດບາບມາເຫນືອເຮົາຕໍ່ພຣະຢາເວ, ເພີ່ມເຂົ້າກັບບາບ ແລະ
ກຳຊົ່ວໃນປະຈຸບັນຂອງເຮົາ, ເພາະວ່າກັມຊົ່ວຂອງເຮົາກໍໃຫຍ່ຫລາຍ, ແລະ ພຣະພິໂຣດອັນແຮງກ້າຕໍ່ອິສະຣາເອນມີຢູ່ແລ້ວ.”
[14]ເພາະສະນັ້ນ ຜູ້ຖືອາວຸດຈຶ່ງຖິ້ມຊະເລີຍ ແລະ ສິ່ງຂອງທີ່ຍຶດມາຕໍ່ຫນ້າເຈົ້ານາຍ ແລະ ຊຸມນຸມຊົນທັງປວງ.
[15]ຜູ້ຊາຍທີ່ຖືກລະບຸຊື່ນັ້ນໄດ້ລຸກຂຶ້ນເອົາເສື້ອຜ້າທີ່ຍຶດມາໃຫ້ແກ່ຄົນທີ່ເປືອຍກາຍຢູ່ໃນພວກຊະເລີຍ ແລະ ພວກເຂົາກໍນຸ່ງຫົ່ມໄວ້
ທັງເອົາເກີບໃຫ້ພວກເຂົາໃສ່. ພວກເຂົາຈັດຫາອາຫານ ເຄື່ອງດື່ມໃຫ້. ພວກເຂົາທັງທາບາດແຜໃຫ້ພວກເຂົາ ແລະ ນຳຄົນທີ່ອ່ອນເພຍຂຶ້ນລາ.
ນຳພວກເຂົາກັບມາຫາຍາດພີ່ນ້ອງຂອງພວກເຂົາທີ່ເມືອງເຢຣິໂກ, (ຄືເມືອງແຫ່ງຕົ້ນຕານ) ແລະ ພວກເຂົາທັງຫລາຍກໍກັບໄປຊາມາເຣຍ.
[16]ໃນເວລານັ້ນນັ້ນກະສັດອາຮາດຊົງໃຊ້ໃຫ້ໄປຫາກະສັດແຫ່ງອັດຊີເຣຍເພື່ອຂໍຄວາມຊ່ວຍເຫລືອ.[17]ເພາະຄົນເອໂດມໄດ້ບຸກລຸກເຂົ້າມາອີກ
ໄດ້ໂຈມຕີຢູດາ, ແລະ ຈັບໄປເປັນຊະເລີຍນຳ.[18]ຄົນຟີລິສະຕິນໄດ້ເຂົ້າປຸ້ນຫົວເມືອງໃນພູເຂົາ ແລະ ທີ່ພາກໃຕ້ຂອງຢູດາ.
ພວກເຂົາໄດ້ຍຶດເມືອງເບັດເຊເມັດ, ອາຢາໂລນ, ເກເດໂຣດ, ໂສໂກກັບຫມູ່ບ້ານ, ຕິມນາກັບຫມູ່ບ້ານ, ແລະ ທັງກິມໂຊກັບຫມູ່ບ້ານ.
ພວກເຂົາກໍຕັ້ງເຕັນຢູ່ບ່ອນນັ້ນ.
[19]ເພາະພຣະຢາເວໄດ້ຊົງກະທຳໃຫ້ຢູດາອ່ອນແອລົງດ້ວຍອາຮາດ, ກະສັດແຫ່ງອິສະຣາເອນ; ເພາະອາຮາດຊົງປ່ອຍໃຫ້ຫລົງອຳນາດຢູ່ໃນຢູດາ
ແລະ ບໍ່ສັດຊື່ຕໍ່ພຣະຢາເວຢ່າງຫນັກ.[20]ສະນັ້ນ ຕິກລັດປີເລເສ, ກະສັດແຫ່ງອັດຊີເຣຍ, ຈຶ່ງຍົກທັບຂຶ້ນມາຕໍ່ສູ້ກັບພະອົງ ແລະ
ເຮັດໃຫ້ພະອົງທຸກພະທັຍແທນທີ່ຈະສະຫນັບສະຫນູນພະອົງໃຫ້ເຂັ້ມແຂງ.
[21]ເພາະອາຮາດຊົງເອົາສິ່ງຂອງສ່ວນຫນຶ່ງຈາກພຣະວິຫານຂອງພຣະຢາເວ ແລະ ຈາກຣາຊະສຳນັກຈາກເຈົ້ານາຍ,
ທີ່ຖວາຍເປັນບັນນາການແກ່ກະສັດຂອງອັດຊີເຣຍ. ແຕ່ການກະທຳນີ້ບໍ່ເປັນປະໂຫຍດແກ່ພຣະອົງ.
[22]ໃນຄາວທຸກຍາກຂອງພະອົງຍັງບໍ່ສັດຊື່ຕໍ່ພຣະຢາເວຄືກະສັດອາຮາດອົງດຽວກັນນີ້ແຫລະ.
[23]ເພາະພະອົງຊົງຖວາຍສັດບູຊາແກ່ພະຂອງເມືອງດາມາເຊ, ຊຶ່ງໄດ້ໃຫ້ພະອົງພ່າຍແພ້. ພະອົງໄດ້ກ່າວວ່າ,
“ເພາະວ່າພະຂອງກະສັດຊີເຣຍໄດ້ຊ່ວຍພວກເຂົາທັງຫລາຍ, ເຮົາຈຶ່ງຈະຖວາຍສັດບູຊາແກ່ພະເຫລົ່ານັ້ນ, ເພື່ອຈະຊ່ວຍເຮົາ.”
ແຕ່ພະເຫລົ່ານັ້ນເປັນເຄື່ອງທຳລາຍພະອົງ ແລະອິສະຣາເອນທັງປວງດ້ວຍ.
[24]ອາຮາດຊົງຮວບຮວມເຄື່ອງໃຊ້ຂອງພຣະວິຫານແຫ່ງພຣະເຈົ້າ ແລະ ຕັດເຄື່ອງໃຊ້ແຫ່ງພຣະວິຫານຂອງພຣະເຈົ້າເປັນຕ່ອນ.
ພະອົງຊົງປິດປະຕູພຣະວິຫານຂອງພຣະຢາເວ ແລະຊົງສ້າງແທ່ນບູຊາສຳລັບພະອົງທຸກແຈເມືອງເຢຣູຊາເລັມ.
[25]ພະອົງຊົງສ້າງປູຊະນີຍະສະຖານສູງໃນຫົວເມືອງຂອງຢູດາທຸກຫົວເມືອງ ເພື່ອເຜົາເຄື່ອງຫອມຖວາຍພະອື່ນ. ເຮັດໃຫ້ພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງພະອົງຊົງພຣະພິໂຣດ.
[26]ສ່ວນພະຣາຊະກິດນອກນັ້ນຂອງພະອົງ, ແລະ ກິຈະກຳປະຈຳວັນຂອງພະອົງທັງຫມົດ, ຕັ້ງແຕ່ຕົ້ນຈົນຈົບ,
ກໍມີບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງຢູດາ ແລະ ອິສະຣາເອນ.[27]ອາຮາດກໍລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ, ແລະ
ພວກເຂົາຝັງພະສົບໄວ້ໃນກຸງເຢຣູຊາເລັມ, ແຕ່ເຂົາບໍ່ໄດ້ນຳພະສົບໄປໄວ້ໃນຂຸມຝັງສົບຂອງກະສັດແຫ່ງອິສະຣາເອນ. ເຮເຊກີຢາ,
ລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນພະອົງ.


generated on Tue Jun 17 19:01:42 2025

29 [1]ເມື່ອເຮເຊກີຢາໄດ້ຊົງເລີ່ມປົກຄອງເມື່ອພະອົງມີອາຍຸຊາວຫ້າປີ; ພະອົງຊົງປົກຄອງໃນເມືອງເຢຣູຊາເລັມຊາວເກົ້າປີ.
ພະນາມຂອງພະອົງຊົງພະນາມວ່າ ອາບີຢາ; ລູກສາວຂອງເຊຄາຣີຢາ.
[2]ແລະພະອົງຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ, ຕາມທີ່ດາວິດບັນພະບຸຣຸດຂອງພະອົງໄດ້ຊົງກະທຳທຸກປະການ.

[3]ໃນປີທຳອິດແຫ່ງຣາຊະການຂອງພະອົງ, ໃນເດືອນທຳອິດ, ເຮຊາກີຢາຊົງເປີດປະຕູພຣະວິຫານຂອງພຣະຢາເວ ແລະ
ໄດ້ຊົງສ້ອມແປງປະຕູນັ້ນ.[4]ພະອົງຊົງນຳປະໂລຫິດ ແລະ ຄົນເລວີເຂົ້າມາ, ແລະ ຊົງໃຫ້ພວກເຂົາຊຸມນຸມທີ່ຖະໜົນທາງທິດຕາເວັນອອກ.
[5]ໂດຍກ່າວກັບພວກເຂົາວ່າ, “ຄົນເລວີ ເອີຍ! ຂໍຟັງເຮົາ, ຈົ່ງຊຳຣະຕົວໃຫ້ບໍຣິສຸດ ແລະ ຊຳຣະພຣະວິຫານຂອງພຣະຢາເວ,
ພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານໃຫ້ບໍຣິສຸດ, ແລະ ຂົນສິ່ງເປື້ອນເປິອອກໄປຈາກສະຖານທີ່ບໍຣິສຸດ.
[6]ເພາະບັນພະບຸຣຸດຂອງເຮົາທັງຫລາຍໄດ້ກະທຳການບໍ່ສັດຊື່ ແລະ ໄດ້ເຮັດສິ່ງທີ່ຊົ່ວໃນສາຍພຣະເນດພຣະຢາເວພຣະເຈົ້າຂອງເຮົາ;
ພວກເຂົາໄດ້ປະຖິ້ມພຣະອົງ, ຫັນໜ້າໜີໄປຈາກທີ່ປະທັບຂອງພຣະຢາເວເສຍ.[7]ພວກເຂົາປິດປະຕູລະບຽງພຣະວິຫານ ແລະ
ໄດ້ດັບຕະກຽງເສຍ; ທັງບໍ່ໄດ້ເຜົາເຄື່ອງຫອມ ຫລືຖວາຍເຄື່ອງເຜົາບູຊາໃນສະຖານທີ່ບໍຣິສຸດແດ່ພຣະເຈົ້າແຫ່ງອິສະຣາເອນ.
[8]ເພາະສະນັ້ນ ພຣະພິໂຣດຂອງພຣະຢາເວຈຶ່ງມາເທິງຢູດາ ແລະ ເຢຣູຊາເລັມ, ແລະ ພຣະອົງຊົງເຮັດໃຫ້ເປັນທີ່ໜ້າຢ້ານກົວ, ແລະ
ເປັນທີ່ເຢາະເຍີ້ຍ, ຕາມທີ່ທ່ານໄດ້ເຫັນກັບຕາຂອງທ່ານແລ້ວ.[9]ນີ້ແມ່ນເຫດຜົນວ່າເປັນຫຍັງ ບິດາທັງຫລາຍຂອງເຮົາໄດ້ລົ້ມລົງດ້ວຍດາບ, ແລະ
ລູກຊາຍລູກສາວກັບເມຍຂອງເຮົາໄດ້ຕົກເປັນຊະເລີຍເພາະເຫດນີ້.
[10]ບັດນີ້ ເຮົາມີໃຈປະສົງທີ່ຈະເຮັດຄຳໝັ້ນສັນຍາກັບພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ,
ເພື່ອວ່າພຣະພິໂຣດອັນແຮງກ້າຂອງພຣະອົງຈະຫັນໄປຈາກເຮົາ.[11]ລູກຊາຍທັງຫລາຍຂອງຂ້າພະເຈົ້າເອີຍ,
ຢ່າເມີນເສີຍເພາະພຣະຢາເວໄດ້ຊົງເລືອກທ່ານໃຫ້ຢືນຢູ່ສະເພາະພຣະພັກຂອງພຣະອົງ, ແລະ ເພື່ອບົວລະບັດພຣະອົງ ແລະ ເຜົາເຄື່ອງຫອມ.”
[12]ແລ້ວຄົນເລວີກໍລຸກຂຶ້ນຄື ມາຮາດລູກຊາຍອາມາສາຍ, ແລະ ໂຢເອນລູກຊາຍອາຊາຣີຢາ, ຜູ້ເປັນລູກຫລານຂອງໂກຮາດ; ແລະ
ລູກຫລານຂອງເມຣາຣີ, ກີເຊລູກຊາຍອັບດີ, ແລະ ອາຊາຣີຢາລູກຊາຍເຢຮັນເລເລນ; ແລະ ຂອງຄົນເກໂຊນ, ມີໂຢອາລູກຊາຍຊິມມາ, ແລະ
ເອເດັນລູກຊາຍໂຢອາ.[13]ລູກຫລານຂອງເອລີຊາຟັນ, ມີຊິມຣີ ແລະ ເຢອູເອນ; ແລະ ລູກຫລານຂອງອາສັບ, ມີເຊຄາຣີຢາ ແລະ ມັດຕານີຢາ;
[14]ລູກຫລານຂອງເຮມານ, ມີເຢຮູເອນ, ແລະ ຊີເມອີ; ແລະ ລູກຫລານຂອງເຢດູທູນ, ມີເຊມາຢາ ແລະ ອຸດຊີເອນ.
[15]ພວກເຂົາທັງຫລາຍຮວບຮວມພີ່ນ້ອງຂອງຕົນ, ແລ້ວຊຳຣະຕົນໃຫ້ບໍຣິສຸດ, ແລະ ເຂົ້າໄປ, ຕາມທີ່ກະສັດໄດ້ຊົງບັນຊາ,
ໂດຍພຣະທັມຂອງພຣຢາເວ, ໃຫ້ຊຳຣະພຣະວິຫານຂອງພຣະຢາເວໃຫ້ບໍຣິສຸດ.
[16]ປະໂລຫິດໄດ້ເຂົ້າໄປຂ້າງໃນຂອງພຣະວິຫານຂອງພຣະຢາເວເພື່ອຊຳຣະໃຫ້ບໍຣິສຸດ;
ພວກເຂົານຳສິ່ງທີ່ເປື້ອນເປິທີ່ພົບເຫັນໃນພຣະວິຫານຂອງພຣະຢາເວອອກມາທີ່ເດີ່ນພຣະວິຫານຂອງພຣະຢາເວ.
ຄົນເລວີກໍຂົນເອົາສິ່ງຂອງນັ້ນອອກໄປຍັງຫ້ວຍນ້ຳກິດໂຣນ.[17]ພວກເຂົາເລີ່ມຊຳຣະໃນມື້ທຳອິດຂອງເດືອນທຳອິດ.ໃນວັນທີແປດຂອງເດືອນນັ້ນ
ພວກເຂົາມາຍັງລະບຽງຂອງພຣະຢາເວ. ພວກເຂົາຊຳຣະພຣະວິຫານຂອງພຣະຢາເວຢູ່ແປດມື້ ແລະ ໃນມື້ທີສິບຫົກຂອງເດືອນທຳອິດ
ກໍສຳເລັດ.
[18]ແລ້ວເຂົ້າໄປຫາກະສັດເຮເຊກີຢາ, ໃນພະຣາຊະວັງ ແລະ ໂດຍທູນວ່າ,
“ຂ້າພະອົງທັງຫລາຍໄດ້ເຮັດຄວາມສະອາດພຣະວິຫານຂອງພຣະຢາເວສຳເລັດແລ້ວ, ທັງແທ່ນເຄື່ອງເຜົາບູຊາ, ແລະ
ເຄື່ອງໃຊ້ຂອງແທ່ນນັ້ນທັງໝົດ ແລະ ໂຕະເຂົ້າຈີ່ໜ້າພຣະພັກ, ທັງເຄື່ອງໃຊ້ຂອງໂຕະນັ້ນ.
[19]ເຄື່ອງໃຊ້ທັງໝົດທີ່ກະສັດອາຮາດເລືອກຖິ້ມໃນຣາຊະການຂອງພະອົງ ຕອນທີ່ພະອົງບໍ່ສັດຊື່ຕໍ່ພຣະເຈົ້າ ຂ້າພະອົງທັງຫລາຍໄດ້ຕຽມພ້ອມ
ແລະ ໄດ້ຊຳຣະແລ້ວ. ເບິ່ງແມ, ສິ່ງຂອງເຫລົ່ານັ້ນກໍຢູ່ໜ້າແທ່ນບູຊາຂອງພຣະຢາເວ.”
[20-21]ແລ້ວກະສັດເຮເຊກີຢາຊົງລຸກຂຶ້ນແຕ່ເຊົ້າ ແລະ ຮວບຮວມເອົາເຈົ້ານາຍຂອງເມືອງ; ໃຫ້ໄປນະມັສະການພຣະເຈົ້າໃນພຣະວິຫານອີກ ແລະ
ສະເດັດຂຶ້ນໄປໃນພຣະວິຫານຂອງພຣະຢາເວ. ພວກເຂົາໄດ້ນຳງົວເຖິກເຈັດໂຕ, ແກະຜູ້ເຈັດໂຕ, ລູກແກະເຈັດໂຕ, ແລະ
ແບ້ຜູ້ເຈັດໂຕເປັນເຄື່ອງບູຊາໄຖ່ບາບສຳລັບຣາຊະອານາຈັກ, ສະຖານທີ່ບໍຣິສຸດ, ແລະ ຢູດາ. ພະອົງຊົງບັນຊາໃຫ້ລູກຫລານຂອງອາໂຣນຄື
ປະໂລຫິດໃຫ້ຖວາຍຂອງເຫລົ່ານັ້ນເທິງແທ່ນບູຊາຂອງພຣະຢາເວ.
[22]ພວກເຂົາຈຶ່ງຂ້າງົວເຖິກ, ແລະ ປະໂລຫິດກໍຮັບເລືອດຊິດໃສ່ທີ່ແທ່ນບູຊາ. ພວກເຂົາທັງຫລາຍຂ້າແກະຜູ້ ແລ
ະເອົາເລືອດຂອງມັນຊິດໃສ່ແທ່ນບູຊາ; ແລະ ຂ້າລູກແກະ ເອົາເລືອດຂອງມັນຊິດໃສ່ແທ່ນບູຊາ.
[23]ພວກເຂົາໄດ້ນຳເອົາແບ້ຜູ້ສຳລັບເປັນເຄື່ອງບູຊາໄຖ່ບາບນັ້ນ ພວກເຂົານຳມາໃຫ້ກະສັດ ແລະ ທີ່ປະຊຸມ;
ພວກເຂົາທັງຫລາຍກໍເອົາມືຂອງຕົນວາງເທິງແບ້ນັ້ນ.[24]ປະໂລຫິດກໍຂ້າແບ້ເສຍ, ແລະ ເອົາເລືອດຂອງມັນເຮັດການຄືນດີກັນເທິງແທ່ນນັ້ນ
ເພື່ອເຮັດການລຶບລ້າງມົນທິນບາບໃຫ້ອິດສະຣາເອນທັງປວງ, ເພາະກະສັດຊົງບັນຊາວ່າໃຫ້ເຮັດເຄື່ອງເຜົາບູຊາ ແລະ
ເຄື່ອງບູຊາໄຖ່ບາບສຳລັບອິສະຣາເອນທັງປວງ.
[25]ເຮເຊກີຢາຊົງໃຫ້ຄົນເລວີປະຈຳຢູ່ໃນພຣະວິຫານຂອງພຣະຢາເວ ມີແຊ່ງ, ພິນໃຫຍ່, ແລະ ພິນຄູ່, ຕາມບັນຍັດຂອງດາວິດ, ຂອງຄາດ,
ຜູ້ທຳນວາຍຂອງກະສັດ, ແລະ ຂອງນາທານ, ຜູ້ທຳນວາຍເພາະວ່າພຣະບັນຍັດນັ້ນມາຈາກພຣະຢາເວທາງຜູ້ທຳນວາຍຂອງພຣະອົງ.
[26]ຄົນເລວີກໍຢືນຢູ່ ຖືເຄື່ອງດົນຕຣີຂອງດາວິດ, ແລະ ປະໂລຫິດຖືແກ.
[27]ເຮເຊກີຢາຊົງບັນຊາວ່າ ໃຫ້ຖວາຍເຄື່ອງເຜົາບູຊານັ້ນເທິງແທ່ນ. ເມື່ອເລີ່ມຖວາຍເຄື່ອງເຜົາບູຊາ, ກໍໃຫ້ເລີ່ມຖວາຍເພງແດ່ພຣະຢາເວ ແລະ
ແກກັບເຄື່ອງດົນຕຣີຂອງດາວິດ, ກະສັດຂອງອິສະຣາເອນກໍເລີ່ມດ້ວຍ.[28]ຊຸມນຸມຊົນທັງໝົດກໍນະມັສະການ, ນັກຮ້ອງກໍຮ້ອງເພງ, ແລະ
ຄົນດົນຕຣີກໍເປົ່າແກ; ເຮັດແບບນີ້ຢູ່ຈົນຖວາຍເຄື່ອງເຜົາບູຊາສຳເລັດ.
[29]ເມື່ອການຖວາຍບູຊາສຳເລັດແລ້ວ, ກະສັດ ແລະ ຄົນທັງປວງທີ່ຢູ່ກັບພະອົງກໍກາບລົງນະມັສະການ.[30]ຍິ່ງໄປກວ່ານັ້ນ, ກະສັດເຮເຊກີຢາ, ແລະ
ເຈົ້ານາຍກໍບັນຊາໃຫ້ຄົນເລວີຮ້ອງເພງສັນຣະເສີນພຣະຢາເວດ້ວຍຖ້ອຍຄຳຂອງດາວິດ ແລະຂອງອາສັບຜູ້ທຳນວາຍ.
ພວກເຂົາທັງຫລາຍຮ້ອງເພງສັນຣະເສີນດ້ວຍຄວາມຍິນດີ ແລະ ກົ້ມຫົວລົງນະມັສະການ.


generated on Tue Jun 17 19:01:42 2025

[31]ແລ້ວເຮເຊກີຢາກ່າວວ່າ, “ບັດນີ້ ທ່ານທັງຫລາຍໄດ້ຊຳຮະຕົວຂອງທ່ານໃຫ້ບໍຣິສຸດຕໍ່ພຣະຢາເວ. ຈົ່ງເຂົ້າມາໃກ້ ແລະ ນຳເອົາເຄື່ອງສັດບູຊາ
ແລະ ເຄື່ອງບູຊາໂມທະນາພຣະຄຸນມາຍັງພຣະວິຫານຂອງພຣະຢາເວ.” ແລະຊຸມນຸມຊົນກໍນຳ ເຄື່ອງສັດບູຊາ ແລະ
ເຄື່ອງບູຊາໂມທະນາພຣະຄຸນ, ແລະ ທຸກຄົນທີ່ມີໃຈສະຫມັກກໍໄດ້ນຳເຄື່ອງເຜົາບູຊາມາ.
[32]ຈຳນວນເຄື່ອງເຜົາບູຊາທີ່ຊຸມນຸມຊົນນຳມາຄື ງົວເຖິກເຈັດສິບໂຕ, ແກະຜູ້ຫນຶ່ງຮ້ອຍໂຕ, ແລະ ລູກແກະສອງຮ້ອຍໂຕ.
ທັງຫມົດນີ້ເປັນເຄື່ອງເຜົາບູຊາແດ່ພຣະຢາເວ.[33]ເຄື່ອງບູຊາທີ່ມອບຖວາຍໄວ້ ມີງົວເຖິກຫົກຮ້ອຍໂຕ ແລະ ແກະສາມພັນໂຕ.
[34]ແຕ່ມີປະໂລຫິດຫນ້ອຍເກີນໄປ ຈົນຫລົກຫນັງເຄື່ອງເຜົາບູຊາທັງຫມົດບໍ່ໄດ້, ຄົນເລວີພີ່ນ້ອງຂອງພວກເຂົາກໍໄດ້ຊ່ວຍຈົນງານສຳເລັດ, ແລະ
ຈົນກວ່າປະໂລຫິດຄົນອື່ນຈະສຳເລັດການຊຳຮະຕົນໃຫ້ບໍຣິສຸດ, ເພາະໃນການຊຳຮະຕົນນັ້ນຄົນເລວີຈິງຈັງຫລາຍກວ່າພວກປະໂລຫິດ.
[35]ນອກຈາກເຄື່ອງເຜົາບູຊາຈຳນວນຫລວງຫລາຍແລ້ວ; ຍັງມີໄຂມັນຂອງເຄື່ອງບູຊາເພື່ອຄວາມສາມັກຄີທັມ, ແລະ
ມີເຄື່ອງດື່ມບູຊາຄູ່ກັບເຄື່ອງເຜົາບູຊາດ້ວຍ. ດັ່ງນີ້ແຫລະ ວຽກບົວລະບັດໃນພຣະວິຫານຂອງພຣະຢາເວກໍຟື້ນຄືນມາອີກ.
[36]ເຮເຊກີຢາກັບປະຊາຊົນທັງປວງກໍຊົມຊື່ນຍິນດີ ແລະ ດ້ວຍການທີ່ພຣະເຈົ້າໄດ້ຊົງຊ່ວຍປະຊາຊົນ, ເພາະເລື່ອງນີ້ເກີດຂຶ້ນ
ແລະສຳເລັດລົງຢ່າງວ່ອງໄວ.


generated on Tue Jun 17 19:01:42 2025

30 [1]ເຮເຊກີຢາຊົງຮັບສັ່ງໄປເຖິງອິສະຣາເອນ ແລະ ຢູດາທັງປວງ, ແລະ ຊົງຂຽນໜັງສືເຖິງເອຟຣາຢິມກັບມານາເຊດ້ວຍວ່າ,
ພວກເຂົາທັງຫລາຍຄວນຈະມາພຣະວິຫານຂອງພຣະຢາເວທີ່ເຢຣູຊາເລັມ, ເພື່ອຈະຖືເທສະການປັດສະຄາຖວາຍແດ່ພຣະຢາເວ,
ພຣະເຈົ້າຂອງອິສະຣາເອນ.[2]ເພາະວ່າກະສັດ, ເຈົ້ານາຍຂອງພະອົງ, ແລະ
ທັງຊຸມນຸມຊົນທັງປວງໃນເຢຣູຊາເລັມໄດ້ປຶກສາກັນທີ່ຈະຖືເທສະການປັດສະຄາໃນເດືອນທີສອງ.[3]ພວກເຂົາຈະຖືປັດສະຄາຕາມກຳນົດບໍ່ໄດ້,
ເພາະວ່າພວກປະໂລຫິດຍັງບໍ່ໄດ້ຊຳຣະຕົນໃຫ້ບໍຣິສຸດພຽງພໍແກ່ຈຳນວນ, ແລະປະຊາຊົນຍັງບໍ່ໄດ້ຊຸມນຸມກັນໃນເຢຣູຊາເລັມເທື່ອ.

[4]ແຜນງານນັ້ນກໍເປັນທີ່ພໍໃຈແກ່ກະສັດ ແລະ ຊຸມນຸມຊົນທັງປວງ.[5]ພວກເຂົາຈຶ່ງລົງມະຕິໃຫ້ເຮັດປະກາດອອກໄປທົ່ວອິສະຣາເອນ,
ຕັ້ງແຕ່ເບເອເຊບາຮອດເມືອງດານວ່າ, ປະຊາຊົນຄວນມາຖືປັດສະຄາຖວາຍແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນທີ່ເຢຣູຊາເລັມ.
ເພາະພວກເຂົາບໍ່ໄດ້ຖືເປັນເວລາດົນຕາມທີ່ໄດ້ກຳນົດໄວ້.
[6]ດັ່ງນັ້ນແຫລະຄົນແລ່ນໜັງສືຈຶ່ງອອກໄປທົ່ວອິສະຣາເອນ ແລະ ຢູດາ, ຖືໜັງສືຈາກກະສັດ ແລະ ບັນດາເຈົ້ານາຍຂອງພະອົງ
ເພາະກະສັດໄດ້ຊົງບັນຊາວ່າ, “ຊົນອິສະຣາເອນເອີຍ ຈົ່ງກັບມາຫາພຣະຢາເວ, ພຣະເຈົ້າຂອງອັບຣາຮາມ, ອີຊາກ ແລະ ຢາໂຄບ,
ເພື່ອພຣະອົງຈະຖອຍຫລັງກັບມາຫາຄົນສ່ວນທີ່ເຫລືອຢູ່ຂອງທ່ານ ຜູ້ຊຶ່ງລອດພົ້ນຈາກພະຫັດຂອງກະສັດແຫ່ງອັດຊີເຣຍ.
[7]ຢ່າໃຫ້ເປັນຄືບິດາ ແລະ ພີ່ນ້ອງຂອງທ່ານ, ຜູ້ບໍ່ສັດຊື່ຕໍ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ,
ພຣະອົງຈຶ່ງຊົງມອບພວກເຂົາໄວ້ໃຫ້ປະສົບກັບຄວາມຈິບຫາຍຕາມທີ່ທ່ານເຫັນຢູ່.[8]ແລະບັດນີ້ ຢ່າຄໍແຂງ, ຄືບິດາຂອງທ່ານທັງຫລາຍເລີຍ,
ແຕ່ຈົ່ງຍອມມອບຕົວທ່ານແດ່ພຣະຢາເວ ແລະ ມາໃນສະຖານທີ່ບໍຣິສຸດຂອງພຣະອົງ, ຊຶ່ງພຣະອົງຊົງຊຳຣະໄວ້ໃຫ້ບໍຣິສຸດເປັນນິດ, ແລະ
ບົວລະບັດພຣະຢາເວພຣະເຈົ້າຂອງທ່ານ, ເພື່ອພຣະພິໂຣດອັນແຮງກ້າຂອງພຣະອົງຈະຫັນໄປເສຍຈາກທ່ານ.
[9]ເພາະຖ້າທ່ານທັງຫລາຍຫັນໜ້າກັບມາຫາພຣະຢາເວ, ພີ່ນ້ອງຂອງທ່ານ ແລະ
ລູກຫລານຂອງທ່ານຈະປະສົບກັບຄວາມເມດຕາຈາກຜູ້ທີ່ຈັບພວກເຂົາໄປເປັນຊະເລີຍ, ແລະ ຈະໄດ້ກັບມາໃນແຜ່ນດິນນີ້ອີກ. ເພາະພຣະຢາເວ,
ພຣະເຈົ້າຂອງທ່ານຊົງພຣະເມດຕາ ແລະກະຣຸນາ, ແລະ ຖ້າທ່ານກັບມາຫາພຣະອົງ ພຣະອົງຈະບໍ່ຊົງຫັນພຣະພັກໄປຈາກທ່ານ.”
[10]ດັ່ງນັ້ນຄົນແລ່ນໜັງສືຈຶ່ງໄປຕາມຫົວເມືອງຕ່າງໆທົ່ວແຜ່ນດິນເອຟຣາຢິມ ແລະ ມານາເຊ, ໄກໄປຈົນຮອດເຊບູລູນ,
ແຕ່ຄົນທັງຫລາຍກໍຫົວເຍາະເຍີ້ຍພວກເຂົາ.[11]ຢ່າງໃດກໍຕາມ, ມີແຕ່ຄົນອາເຊ ມານາເຊ ແລະ ເຊບູລູນບາງຄົນທີ່ຖ່ອມຕົວ ແລະ ມາເຢຣູຊາເລັມ.
[12]ພຣະຫັດຂອງພຣະເຈົ້າຢູ່ເໜືອຢູດາໂດຍຊົງໃຫ້ພວກເຂົາເປັນໃຈດຽວກັນທີ່ຈະເຮັດຕາມທີ່ກະສັດ ແລະ
ເຈົ້ານາຍໄດ້ບັນຊາໄວ້ຕາມພຣະທັມຂອງພຣະຢາເວ.
[13]ປະຊາຊົນເປັນຈຳນວນຫລາຍມາປະຊຸມກັນໃນເຢຣູຊາເລັມເພື່ອຖືເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງໃນເດືອນທີສອງ
ເປັນການຊຸມນຸມທີ່ໃຫຍ່ຫລາຍ.[14]ພວກເຂົາລຸກຂຶ້ນ ແລະ ໄດ້ກຳຈັດແທ່ນບູຊາທີ່ຢູ່ໃນເຢຣູຊາເລັມ, ແລະ ແທ່ນສຳລັບເຜົາເຄື່ອງຫອມທັງປວງນັ້ນ,
ພວກເຂົາຂົນໄປຖິ້ມເສຍໃນຫ້ວຍນ້ຳກິດໂຣນ.[15]ພວກເຂົາທັງຫລາຍໄດ້ຂ້າແກະປັດສະຄາໃນວັນທີສິບສີ່ຂອງເດືອນທີສອງ. ປະໂລຫິດ ແລະ
ຄົນເລວີກໍຮູ້ສຶກລະອາຍທີ່ຍັງບໍ່ໄດ້ຊຳຣະຕົນຈາກມົນທິນ, ພວກເຂົາຈຶ່ງຊຳຣະຕົວໃຫ້ບໍຣິສຸດ ແລະ
ນຳເຄື່ອງເຜົາບູຊາໃນພຣະວິຫານຂອງພຣະຢາເວ.
[16]ພວກເຂົາເຂົ້າປະຈຳຕຳແໜ່ງທີ່ເຄີຍເຮັດ, ຕາມບົດບັນຍັດຂອງໂມເຊ, ຄົນຂອງພຣະເຈົ້າ.
ປະໂລຫິດກໍເອົາເລືອດທີ່ຕົນຮັບມາຈາກມືຂອງຄົນເລວີມາຊິດໃສ່.[17]ເພາະວ່າມີຫລາຍຄົນໃນຊຸມນຸມຊົນນັ້ນຍັງບໍ່ໄດ້ຊຳຣະຕົນໃຫ້ບໍຣິສຸດ.
ຄົນເລວີຈຶ່ງຕ້ອງຂ້າແກະປັດສະຄາແທນທຸກຄົນທີ່ມີມົນທິນ ເພື່ອເຮັດໃຫ້ບໍຣິສຸດຕໍ່ພຣະຢາເວ.
[18]ເພາະວ່າໃນນັ້ນມີຄົນເປັນຈຳນວນຫລາຍ, ທີ່ມາຈາກເອຟຣາຢິມ ແລະ ມານາເຊ, ອິດຊາຄາ ແລະ ເຊບູລູນ,ຍັງບໍ່ໄດ້ຊຳຣະຕົນ, ເຖິງປານນັ້ນ
ພວກເຂົາກໍຍັງຮັບປະທານປັດສະຄາ, ຊຶ່ງຜິດຕໍ່ຂໍ້ທີ່ກຳນົດໄວ້. ແຕ່ເຮເຊກີຢາຊົງອະທິຖານເພື່ອພວກເຂົາວ່າ, “ຂໍພຣະຢາເວຜູ້ປະເສີດ
ຊົງໃຫ້ອະພັຍແກ່ທຸກຄົນ.[19]ຜູ້ທີ່ປັກໃຈສະແຫວງຫາພຣະເຈົ້າ ຄືພຣະຢາເວພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ, ເຖິງແມ່ນວ່າ
ຈະບໍ່ຊຳຣະຕົວຕາມກົດຂອງຄວາມບໍຣິສຸດແຫ່ງສະຖານທີ່ບໍຣິສຸດນີ້.”[20]ພຣະຢາເວຊົງຟັງເຮເຊກີຢາ ແລະ ຊົງຮັກສາປະຊາຊົນ.
[21]ປະຊາຊົນອິສະຣາເອນທີ່ຢູ່ໃນເຢຣູຊາເລັມໄດ້ຖືເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງເຈັດມື້ດ້ວຍຄວາມຍິນດີຫລາຍ.
ຄົນເລວີກັບປະໂລຫິດໄດ້ສັນຣະເສີນພຣະຢາເວທຸກມື້ ຮ້ອງເພງເຮັດສຽງດັງດ້ວຍເຄື່ອງດົນຕຣີຂອງພວກເຂົາຖວາຍແດ່ພຣະຢາເວ.
[22]ຝ່າຍເຮເຊກີຢາກໍໄດ້ກ່າວໜູນໃຈພວກຄົນເລວີທັງປວງຜູ້ສອນເຖິງຄວາມຮູ້ອັນປະເສີດແຫ່ງພຣະຢາເວ.
ພວກເຂົາຈຶ່ງຮັບປະທານອາຫານໃນເທສະການນັ້ນເຈັດວັນ, ໄດ້ຖວາຍສັດເປັນເຄື່ອງບູຊາເພື່ອຄວາມສາມັກຄີທັມ
ແລະສາຣະພາບຄວາມຜິດບາບຕໍ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ.
[23]ແລ້ວຊຸມນຸມຊົນທັງໝົດກໍຕົກລົງກັນທີ່ຈະຖືເທສະການໄປອີກເຈັດມື້, ແລະ ພວກເຂົາຈຶ່ງຖືເທສະການໄປອີກເຈັດມື້ດ້ວຍຄວາມຍິນດີ.
[24]ເພາະເຮເຊກີຢາກະສັດແຫ່ງຢູດາໄດ້ຊົງປະທານງົວເຖິກໜຶ່ງພັນໂຕ ແລະ ແກະເຈັດພັນໂຕແກ່ຊຸມນຸມຊົນໃຫ້ເປັນເຄື່ອງເຜົາບູຊາ; ແລະ
ພວກເຈົ້ານາຍໄດ້ໃຫ້ງົວເຖິກໜຶ່ງພັນໂຕ ແລະ ແກະໜຶ່ງໝື່ນໂຕແກ່ຊຸມນຸມຊົນ. ປະໂລຫິດເປັນຈຳນວນຫລາຍກໍໄດ້ຊຳຣະຕົນໃຫ້ບໍຣິສຸດ.
[25]ຊຸມນຸມຊົນທັງໝົດຂອງຢູດາ, ກັບບັນດາປະໂລຫິດ ແລະຄົນເລວີ, ແລະ ທັງຊຸມນຸມຊົນທັງໝົດທີ່ອອກມາຈາກອິສະຣາເອນ, ແລະ
ຄົນຕ່າງດ້າວທີ່ອອກມາຈາກແຜ່ນດິນອິສະຣາເອນ ແລະ ຊຶ່ງຢູ່ໃນຢູດາ—ກໍຊົມຊື່ນຍິນດີພ້ອມກັນ.[26]ຈຶ່ງມີຄວາມຍິນດີອັນໃຫຍ່ໃນເຢຣູຊາເລັມ,
ເພາະຕັ້ງແຕ່ສມັຍຂອງໂຊໂລໂມນລູກຊາຍຂອງດາວິດກະສັດແຫ່ງອິສະຣາເອນ ບໍ່ເຄີຍມີຢ່າງນີ້ເລີຍໃນເຢຣູຊາເລັມ.[27]ແລ້ວບັນດາປະໂລຫິດ,
ແລະ ຄົນເລວີໄດ້ລຸກຂຶ້ນອວຍພອນປະຊາຊົນ. ສຽງຂອງພວກເຂົາກໍເຖິງພຣະກັນ, ແລະ
ຄຳອະທິຖານຂອງພວກເຂົາກໍຂຶ້ນໄປທີ່ປະທັບບໍຣິສຸດຂອງພຣະອົງຄືສະຫວັນ.


generated on Tue Jun 17 19:01:42 2025

31 [1]ເມື່ອສຳເລັດງານນີ້ທັງຫມົດແລ້ວ, ອິສະຣາເອນທັງປວງຜູ້ຢູ່ບ່ອນນັ້ນໄດ້ອອກໄປໃນຫົວເມືອງຢູດາ ແລະ ທຳລາຍເສົາສັກສິດເປັນທ່ອນ
ແລະ ລົ້ມບັນດາເສົາຮູບເຄົາຣົບລົງ, ແລະ ທັງທຳລາຍປູຊະນີຍະສະຖານສູງລົງ ແລະ ພັງແທ່ນທົ່ວຢູດາ ແລະ ເບັນຢາມິນທັງຫມົດ, ແລະ
ໃນເອຟຣາຢິມກັບມານາເຊ, ຈົນພວກເຂົາທຳລາຍຫມົດສິ້ນ. ປະຊາຊົນອິສະຣາເອນທັງປວງກໍກັບໄປໃນຫົວເມືອງຂອງຕົນ,
ທຸກຄົນກັບໄປຕາມຊັບສິນຂອງເຂົາ ແລະ ເມືອງຂອງຕົນ.

[2]ເຮເຊກີຢາໄດ້ຊົງຈັດການແບ່ງບັນດາປະໂລຫິດ ແລະ ຄົນເລວີອອກເປັນຫມວດ, ແຕ່ລະຫມວດຕາມຫນ້າທີ່ບົວລະບັດຂອງຕົນຄື
ບັນດາປະໂລຫິດ ແລະ ຄົນເລວີ. ພະອົງໄດ້ຊົງກຳນົດໃຫ້ພວກເຂົາຖວາຍເຄື່ອງເຜົາບູຊາ ແລະ ເຄື່ອງບູຊາເພື່ອຄວາມສາມັກຄີທັມ,
ໃຫ້ບົວລະບັດ, ຖວາຍໂມທະນາພຣະຄຸນ, ແລະ ສັນຣະເສີນພາຍໃນປະຕູຄ້າຍຂອງພຣະຢາເວ.
[3]ສ່ວນທີ່ກະສັດຊົງບໍຣິຈາກຈາກຊັບສິນສ່ວນພະອົງນັ້ນ ເປັນເຄື່ອງເຜົາບູຊາຄື ເຄື່ອງເຜົາບູຊາສຳລັບຕອນເຊົ້າ ແລະ ຕອນແລງ, ແລະ
ເຄື່ອງເຜົາບູຊາສຳລັບວັນສະບາໂຕ, ວັນຂຶ້ນຫນຶ່ງຄ່ຳ ແລະ ເທສະການຕາມກຳນົດ, ດັ່ງທີ່ບັນທຶກໄວ້ໃນພຣະບັນຍັດຂອງພຣະຢາເວ.
[4]ນອກຈາກນັ້ນ, ພະອົງຊົງບັນຊາປະຊາຊົນຜູ້ຢູ່ໃນເຢຣູຊາເລັມໃຫ້ບໍຣິຈາກສ່ວນທີ່ເປັນຂອງປະໂລຫິດ ແລະ ຂອງຄົນເລວີ,
ເພື່ອພວກເຂົາເຫລົ່ານັ້ນຈະໄດ້ເຂັ້ມແຂງຂຶ້ນໃນພຣະບັນຍັດຂອງພຣະຢາເວ.[5]ເມື່ອພຣະບັນຊາກະຈາຍອອກໄປ,
ປະຊາຊົນອິສະຣາເອນກໍໄດ້ບໍຣິຈາກເຂົ້າມາຢ່າງຫລວງຫລາຍມີເຂົ້າລຸ້ນທຳອິດ, ນ້ຳອະງຸ່ນ, ນ້ຳມັນ, ນ້ຳເຜິ້ງ,
ແລະຜະລິດຜົນທຸກຢ່າງຂອງໄຮ່ນາ. ພວກເຂົາຍັງນຳເອົາຫນຶ່ງສ່ວນສິບຂອງທຸກຊະນິດເຂົ້າມາຢ່າງຫລວງຫລາຍ.
[6]ປະຊາຊົນອິສະຣາເອນ ແລະ ຢູດາຜູ້ອາສັຍຢູ່ໃນຫົວເມືອງຂອງຢູດາໄດ້ນຳຫນຶ່ງສ່ວນສິບຂອງງົວ ແລະ ແກະ, ແລະ
ຫນຶ່ງສ່ວນສິບຂອງສິ່ງບໍຣິສຸດທີ່ມອບຖວາຍແດ່ພຣະຢາເວ, ພຣະເຈົ້າຂອງຕົນ ແລະ ເກັບໄວ້ເປັນກອງ.[7]ໃນເດືອນທີສາມ
ພວກເຂົາເລີ່ມກອງສູງຂຶ້ນ, ແລະ ສຳເລັດໃນເດືອນທີເຈັດ.[8]ເມື່ອເຮເຊກີຢາ ແລະ ເຈົ້ານາຍມາເຫັນກອງເຫລົ່ານັ້ນ,
ພວກເພິ່ນກໍຖວາຍສາທຸການແດ່ພຣະຢາເວ ແລະ ອວຍພອນແກ່ອິສະຣາເອນ ແລະ ປະຊາຊົນຂອງພຣະອົງ.
[9]ເຮເຊກີຢາຊົງໄຕ່ຖາມປະໂລຫິດ ແລະ ຄົນເລວີເຖິງເລື່ອງກອງເຫລົ່ານັ້ນ.[10]ອາຊາຣີຢາ, ປະໂລຫິດໃຫຍ່,
ຜູ້ເປັນເຊື້ອສາຍຂອງຊາໂດກທູນຕອບພະອົງວ່າ, “ຕັ້ງແຕ່ປະຊາຊົນໄດ້ເລີ່ມນຳສ່ວນບໍລິຈາກເຂົ້າມາໃນພຣະວິຫານຂອງພຣະຢາເວ,
ພວກຂ້າພະອົງໄດ້ຮັບປະທານ ແລະ ມີພຽງພໍຈົນເຫລືອຫລາຍ, ເພາະພຣະຢາເວໄດ້ຊົງອຳນວຍພະພອນປະຊາຊົນຂອງພະອົງ.
ຈຶ່ງມີເຫລືອຢູ່ຫລວງຫລາຍຢ່າງນີ້.”[11]ແລ້ວເຮເຊກີຢາຈຶ່ງຊົງບັນຊາໃຫ້ພວກເຂົາຈັດຫ້ອງໃນພຣະວິຫານຂອງພຣະຢາເວ,
ແລະພວກເຂົາທັງຫລາຍກໍຈັດໄວ້.[12]ພວກເຂົານຳສິ່ງບໍຣິຈາກເຂົ້າມາຢ່າງສັດຊື່, ທັງຫນຶ່ງສ່ວນສິບ ແລະ
ສິ່ງຂອງມອບຖວາຍຊຶ່ງເປັນຂອງພຣະຢາເວ. ເຈົ້າຫນ້າທີ່ຜູ້ເບິ່ງແຍງຄືໂກນານີຢາ, ຄົນເລວີ ກັບຊີເມອີນ້ອງຊາຍເປັນຄົນຮອງ.[13]ເຢຮີເອນ,
ອາຊາຊີຢາ, ນາຮາດ, ອາສາເຮນ, ເຢຣີໂມດ, ໂຢຊາບັດ, ເອລີເອນ, ອິສະມາກີຢາ, ມາຮາດ, ແລະ ເບນາຢາ
ເປັນຜູ້ຄວບຄຸມຊ່ວຍເຫລືອໂກນານີຢາ ແລະ ຊີເມອີນ້ອງຊາຍຂອງລາວ, ໂດຍການແຕ່ງຕັ້ງຂອງກະສັດເຮເຊກີຢາ, ແລະ ອາຊາຣີຢາ,
ເຈົ້າຫນ້າທີ່ຊັ້ນຜູ້ໃຫຍ່ຂອງພຣະວິຫານຂອງພຣະເຈົ້າ.
[14]ໂກເຣ ລູກຊາຍອິມນາຄົນເລວີ, ຜູ້ເຝົ້າປະຕູດ້ານຕາເວັນອອກ, ເປັນຜູ້ເບິ່ງແຍງຂອງບູຊາທີ່ຖວາຍຕາມໃຈ ສະຫມັກແດ່ພຣະເຈົ້າ,
ແຈກຢາຍສ່ວນບໍຣິຈາກທີ່ສະຫງວນໄວ້ສຳລັບພຣະຢາເວ ແລະ ສິ່ງບໍຣິສຸດທີ່ສຸດ.[15]ພາຍໃຕ້ເຂົາຄື ເອເດັນ, ມິນຢາມິນ, ເຢຊູອາ, ເຊມາຢາ,
ອາມາຣີຢາ, ແລະ ເຊການີອາ ໃນເມືອງຕ່າງໆຂອງປະໂລຫິດ. ພວກເຂົາໄດ້ເຮັດໃຫ້ບັນດາຫນ້າທີ່ຕ່າງ ເປັນທີ່ໄວ້ວາງໃຈ,
ເພື່ອພວກເຂົາແຈກຢາຍເຄື່ອງບູຊາຖວາຍເຫລົ່ານີ້ໃຫ້ແກ່ພີ່ນ້ອງຂອງພວກເຂົາທັງຫລາຍ, ໂດຍໃຫ້ທັງຜູ້ທີ່ສຳຄັນ ແລະ ຜູ້ທີ່ບໍ່ສຳຄັນ.
[16]ພວກເຂົາໄດ້ໃຫ້ຜູ້ຊາຍເຫລົ່ານັ້ນຕັ້ງແຕ່ສາມປີຂຶ້ນໄປຜູ້ທີ່ໄດ້ຂຶ້ນທະບຽນໄວ້ຕາມບັນທຶກຂອງບັນພະບຸຣຸດຂອງພວກເຂົາ
ຜູ້ທີ່ເຂົ້າໄປໃນພຣະວິຫານຂອງພຣະຢາເວ, ຕາມຜຽນທີ່ໄດ້ກຳນົດໄວ້ຕາມຫນ້າທີ່ປະຈຳວັນ, ເພື່ອບົວລະບັດຕາມຫນ້າທີ່ໂດຍກອງຂອງພວກເຂົາ
ແລະ ໃນສ່ວນຕ່າງໆຂອງພວກເຂົາ.
[17]ພວກເຂົາໄດ້ແຈກຢາຍໃຫ້ກັບບັນດາປະໂລຫິດກໍເຮັດຕາມເຊື້ອສາຍແຫ່ງບັນພະບຸຣຸດຂອງພວກເຂົາ ແລະ ຄືກັນກັບ
ສ່ວນຄົນເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປ ແລະ ຫລາຍກວ່າ, ຕາມຫນ້າທີ່ຂອງພວກເຂົາ ຕາມຜຽນຂອງພວກເຂົາທັງຫລາຍ.
[18]ພວກເຂົາໄດ້ລວມທັງລູກນ້ອຍຂອງຕົນ, ເມຍຂອງຕົນ, ແລະ ລູກຊາຍລູກສາວຂອງປວງຊົນທັງຫມົດ,
ເພາະພວກເຂົາທັງຫລາຍສັດຊື່ໃນການຮັກສາຕົວໃຫ້ບໍຣິສຸດ.[19]ສຳລັບເຊື້ອສາຍຂອງອາໂຣນຄືພວກປະໂລຫິດ,
ຜູ້ຢູ່ໃນທົ່ງນາອ້ອມຮອບຫົວເມືອງຂອງພວກເຂົານັ້ນ, ຫລື ໃນຫົວເມືອງຕ່າງໆ,
ມີຜູ້ຊາຍທີ່ຖືກລະບຸຊື່ໃຫ້ແຈກຢາຍສ່ວນແບ່ງແກ່ຜູ້ຊາຍທຸກຄົນໃນພວກປະໂລຫິດ, ແລະ
ແກ່ທຸກຄົນທີ່ໄດ້ບັນທຶກຢູ່ໃນບັນຊີໃນບັນທຶກຂອງບັນດາບັນພະບຸຣຸດຂອງພວກເຂົາໃນທ່າມກາງພວກເລວີ.
[20]ເຮເຊກີຢາຊົງກະທຳດັ່ງນີ້ທົ່ວທັງຢູດາ. ພະອົງຊົງກະທຳສິ່ງທີ່ດີ ແລະ ຊອບ, ແລະ ເປັນຄວາມຈິງຕໍ່ພຣະພັກພຣະຢາເວ, ພຣະເຈົ້າຂອງພະອົງ.
[21]ວຽກງານທຸກຢ່າງທີ່ພະອົງຊົງເລີ່ມເຮັດໃນການບົວລະບັດພຣະວິຫານຂອງພຣະເຈົ້າ, ຕາມກົດຫມາຍ, ແລະ ຕາມພຣະບັນຍັດ,
ເພື່ອສະແຫວງຫາພຣະເຈົ້າຂອງພະອົງ, ພະອົງຊົງກະທຳດ້ວຍເຕັມພະທັຍ, ແລະ ຊົງຈະເຣີນຂຶ້ນ.

32 [1]ພາຍຫລັງເຫດການເຫລົ່ານີ້ ແລະ ການກະທຳທີ່ສັດຊື່, ເສັນນາເກຣິບ, ກະສັດອັດຊີເຣຍ, ໄດ້ຍົກທັບມາບຸກລຸກຢູດາ.
ພະອົງໄດ້ຕັ້ງຄ້າຍອ້ອມຫົວເມືອງທີ່ມີປ້ອມໄວ້, ຊຶ່ງໄດ້ຕັ້ງໃຈຈະຢຶດເອົາໄວ້ສຳລັບພຣະອົງເອງ.

[2]ເມື່ອເຮເຊກີຢາຊົງເຫັນວ່າເສັນນາເກຣິບຍົກທັບມາດ້ວຍເຈຕະນາຈະຕໍ່ສູ້ກັບເຢຣູຊາເລັມ,[3]ພະອົງຊົງວາງແຜນການກັບເຈົ້ານາຍຂອງພະອົງ
ແລະ ທະຫານຜູ້ເກັ່ງກ້າຂອງພະອົງ ທີ່ຈະອັດນ້ຳຕາມນ້ຳພຸທີ່ຢູ່ນອກເມືອງເສຍ ແລະ ພວກເຂົາທັງຫລາຍກໍຊົງຊ່ວຍພະອົງ.
[4]ມີປະຊາຊົນເປັນຈຳນວນຫລາຍຮວບຮວມກັນເຂົ້າມາ ແລະ ອັດນ້ຳພຸ ປິດລຳທານທີ່ໄຫລຜ່ານແຜ່ນດິນເສຍ. ໂດຍເວົ້າວ່າ,
“ເປັນຫຍັງຈະໃຫ້ບັນດາກະສັດອັດຊີເຣຍຍົກທັບມາພົບນ້ຳເປັນຈຳນວນຫລາຍ.”
[5]ເຮເຊກີຢາໄດ້ຊົງກ້າຫານ ແລະ ໄດ້ຊົງສ້າງກຳແພງທີ່ເພພັງຂຶ້ນໃຫມ່. ພະອົງໄດ້ສ້າງຫໍຄອຍສູງຂຶ້ນ ແລະ ຊົງສ້າງກຳແພງຂ້າງນອກອີກຊັ້ນຫນຶ່ງ
ພະອົງຊົງເສີມກຳແພງປ້ອມມິນໂລທີ່ນະຄອນດາວິດ,ແລະ ຊົງສ້າງຫອກ ແລະ ໂລ່ເປັນຈຳນວນຫລາຍ.
[6]ພະອົງຊົງຕັ້ງຜູ້ບັງຄັບການໄວ້ເຫນືອປະຊາຊົນ. ພະອົງໄດ້ຊົງຮວບຮວມເຂົ້າໄວ້ນຳກັນໃນຖະຫນົນທີ່ປະຕູເມືອງ ແລະ
ກ່າວຫນູນໃຈພວກເຂົາທັງຫລາຍ. ພະອົງກ່າວວ່າ,[7]“ຈົ່ງເຂັ້ມແຂງ ແລະກ້າຫານເຖີດ. ຢ່າຢ້ານ ຫລື ທໍ້ຖອຍຕໍ່ກະສັດອັດຊີເຣຍ ແລະ
ຕໍ່ກອງທັບທັງຫມົດທີ່ຢູ່ກັບພວກເຂົານັ້ນ, ເພາະມີຜູ້ຫນຶ່ງໃນຝ່າຍເຮົາທີ່ໃຫຍ່ກວ່າຝ່າຍພວກເຂົາ.[8]ຝ່າຍພວກເຂົາມີແຕ່ກຳລັງເນື້ອຫນັງ,
ແຕ່ຝ່າຍເຮົາມີພຣະຢາເວ, ພຣະເຈົ້າຂອງເຮົາ, ຊົງສະຖິດກັບເຮົາ, ທີ່ຊົງຊ່ອຍເຮົາ ແລະ ສູ້ຮົບກັບຝ່າຍເຮົາ.”
ປະຊາຊົນກໍວາງໃຈໃນພຣະດຳຣັດຂອງເຮເຊກີຢາກະສັດແຫ່ງຢູດາ.
[9]ພາຍຫລັງ, ເສັນນາເກຣິບ, ກະສັດແຫ່ງອັດຊີເຣຍ, (ຜູ້ທີ່ກຳລັງອ້ອມເມືອງລາກິດຢູ່ດ້ວຍກຳລັງຮົບທັງຫມົດຂອງພະອົງ)
ໄດ້ຮັບສັ່ງໃຫ້ຂ້າຣາຊະການຂອງພະອົງໄປເມືອງເຢຣູຊາເລັມເຖິງເຮເຊກີຢາກະສັດຂອງຢູດາ, ແລະ
ເຖິງປະຊາຊົນທັງປວງຂອງຢູດາທີ່ຢູ່ໃນເຢຣູຊາເລັມ. ຊົງກ່າວວ່າ,[10]“ເສັນນາເກຣິບກະສັດແຫ່ງອັດຊີເຣຍ, ກ່າວດັ່ງນີ້ວ່າ: ເຈົ້າທັງຫລາຍເພິ່ງຫຍັງ
ເຈົ້າຈຶ່ງຢືນຫມັ້ນອ້ອມຢູ່ໃນເມືອງເຢຣູຊາເລັມ?
[11]ເຮເຊກີຢາບໍ່ໄດ້ພາເຈົ້າໃຫ້ຫລົງເພື່ອຈະມອບເຈົ້າໃຫ້ຕາຍດ້ວຍການອົດອາຫານ ແລະ ຄວາມກະຫາຍຫລື, ໃນເມື່ອລາວບອກເຈົ້າວ່າ,
'ພຣະຢາເວພຣະເຈົ້າຂອງເຮົາຈະຊົງຊ່ອຍເຮົາໃຫ້ພົ້ນຈາກມືຂອງກະສັດແຫ່ງອັດຊີເຣຍ'?[12]ເຮເຊກີຢາຄົນນີ້ແຫລະ ບໍ່ແມ່ນຫລື
ທີ່ໄດ້ກຳຈັດປູຊະນີຍະສະຖານອັນສັກສິດ ແລະແທ່ນບູຊາຂອງພະອົງ ແລະ ບັນຊາແກ່ຢູດາກັບເຢຣູຊາເລັມວ່າ,
'ເຈົ້າຈົ່ງນະມັດສະການຢູ່ຫນ້າແທ່ນບູຊາແທ່ນດຽວ, ແລະ ເຈົ້າຈົ່ງເຜົາເຄື່ອງຫອມເທິງແທ່ນນັ້ນ'?
[13]ເຈົ້າບໍ່ຮູ້ຫລືວ່າ ເຮົາ ແລະ ບັນພະບຸຣຸດຂອງເຮົາໄດ້ເຮັດຫຍັງແກ່ຊົນຊາດທັງຫລາຍແຫ່ງປະເທດຕ່າງໆ?
ພະຂອງບັນດາປະຊາຊາດແຫ່ງປະເທດເຫລົ່ານັ້ນສາມາດຊ່ອຍປະເທດຂອງພວກເຂົາໃຫ້ພົ້ນຈາກມືຂອງເຮົາໄດ້ບໍ?
[14]ໃນພວກພະທັງປວງແຫ່ງປະຊາຊາດເຫລົ່ານັ້ນທີ່ບັນພະບຸຣຸດຂອງເຮົາໄດ້ທຳລາຍເສຍຈົນຫມົດສິ້ນ,
ຍັງມີພະອົງໃດແດ່ທີ່ສາມາດຊ່ອຍປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາ?
ແລ້ວພຣະເຈົ້າຂອງເຈົ້ານັ້ນຫລືຈະສາມາດຊ່ອຍເຈົ້າໃຫ້ພົ້ນຈາກມືຂອງເຮົາ?[15]ເພາະສະນັ້ນ ບັດນີ້ຢ່າໃຫ້ເຮເຊກີຢາຫລອກລວງເຈົ້າ ຫລື
ພາເຈົ້າໃຫ້ຫລົງໃນທຳນອງນີ້. ຢ່າເຊື່ອລາວ, ເພາະບໍ່ມີພະແຫ່ງປະຊາຊາດ
ຫລືຣາຊະອານາຈັກໃດທີ່ສາມາດຊ່ວຍປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາ, ຫລືຈາກມືບັນພະບຸຣຸດຂອງເຮົາ.
ພຣະເຈົ້າຂອງເຈົ້າຈະຊ່ອຍເຈົ້າໃຫ້ພົ້ນຈາກມືຂອງເຮົາໄດ້ຫລາຍກວ່ານັ້ນຈັກເທົ່າໃດ?"
[16]ພວກຂ້າຣາຊະການຂອງເຮເຊກີຢາກໍກ່າວທັບຖົມພຣະເຈົ້າຢາເວ ແລະ ເຮເຊກີຢາຜູ້ຮັບໃຊ້ຂອງພຣະອົງຫລາຍກວ່ານັ້ນ.
[17]ເຮເຊກີຢາຍັງໄດ້ຊົງຂຽນຫນັງສືຫມິ່ນປະຫມາດພຣະຢາເວ, ພຣະເຈົ້າຂອງອິສະຣາເອນ, ແລະ ກ່າວທັບຖົມພຣະອົງ. ກ່າວວ່າ
“ພະຂອງບັນດາປະຊາຊາດແຫ່ງປະເທດທັງຫລາຍບໍ່ໄດ້ຊ່ອຍປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາສັນໃດ,
ພຣະເຈົ້າຂອງເຮເຊກີຢາກໍຈະບໍ່ຊ່ອຍປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາສັນນັ້ນ.”
[18]ພວກເຂົາທັງຫລາຍກໍຮ້ອງຄວາມນີ້ດ້ວຍສຽງອັນດັງເປັນພາສາເຮັບເຣີໃຫ້ຊາວເຢຣູຊາເລັມຜູ້ຢູ່ເທິງກຳແພງຟັງ, ເພື່ອໃຫ້ພວກເຂົາຕົກໃຈ ແລະ
ຫວັ່ນໄຫວ, ແລ້ວຈະໄດ້ຢຶດເອົາເມືອງນັ້ນ.
[19]ພວກເຂົາໄດ້ເວົ້າເຖິງພຣະເຈົ້າແຫ່ງເຢຣູຊາເລັມຄືກັບທີ່ພວກເຂົາເວົ້າເຖິງພະແຫ່ງຊົນຊາດທັງຫລາຍຂອງແຜ່ນດິນໂລກ,
ຊຶ່ງເປັນຜົນງານຂອງມືມະນຸດ.
[20]ກະສັດ, ເຮເຊກີຢາ, ແລະ ຜູ້ທຳນວາຍເອຊາຢາລູກຊາຍອາໂມດ, ໄດ້ອະທິຖານ ເພາະເລື່ອງນີ້ ໂດຍຮ້ອງທູນຕໍ່ສະຫວັນ.
[21]ພຣະຢາເວຊົງໃຊ້ຜູ້ສື່ງຂ່າວສະຫວັນອົງຫນຶ່ງ, ຊຶ່ງໄດ້ຕັດທະຫານກ້າທັງປວງ, ຜູ້ບັງຄັບກອງທັບ, ແລະ
ນາຍທະຫານໃນຄ້າຍຂອງກະສັດແຫ່ງອັດຊີເຣຍອອກເສຍ. ເພາະສະນັ້ນ
ພະອົງຈຶ່ງສະເດັດກັບໄປໃນແຜ່ນດິນຂອງພະອົງດ້ວຍຄວາມອັບອາຍຂາຍຫນ້າ. ເມື່ອພະອົງສະເດັດເຂົ້າໃນວິຫານແຫ່ງພະຂອງພະອົງ,
ລູກຊາຍຂອງພະອົງເອງໄດ້ຂ້າພະອົງດ້ວຍດາບ.
[22]ດ້ວຍວິທີນີ້, ພຣະຢາເວຈຶ່ງຊົງຊ່ອຍເຮເຊກີຢາ ແລະ ຊາວເຢຣູຊາເລັມໃຫ້ພົ້ນຈາກພະຫັດຂອງເສັນນາເກຣິບ, ກະສັດຂອງອັດຊີເຣຍ, ແລະ
ຈາກມືຂອງສັດຕຣູທັງຫມົດຂອງພະອົງ, ແລະພະອົງຊົງນຳພວກເຂົາທັງຫລາຍຢູ່ທຸກດ້ານ.
[23]ຄົນເປັນຈຳນວນຫລາຍນຳເຄື່ອງຖວາຍພຣະຢາເວມາໃນເຢຣູຊາເລັມ, ແລະ
ນຳຂອງຂອງຂັວນອັນມີຄ່າຕ່າງໆມາຖວາຍເຮເຊກີຢາກະສັດແຫ່ງຢູດາ,
ພະອົງຈຶ່ງຊົງເປັນທີ່ຍົກຍ້ອງໃນສາຍຕາຂອງປະຊາຊາດທັງປວງຕັ້ງແຕ່ເວລານັ້ນເປັນຕົ້ນມາ.
[24]ຄັ້ງນັ້ນ ເຮເຊກີຢາຊົງເຈັບປ່ວຍໃກ້ຈະສິ້ນພະຊົນ. ພະອົງທູນອະທິຖານຕໍ່ພຣະຢາເວ, ພຣະຜູ້ເປັນເຈົ້າຊົງຕອບ ແລະ
ປຣະທານຫມາຍສຳຄັນຢ່າງຫນຶ່ງໃຫ້ແກ່ເຮເຊກີຢາ.
[25]ແຕ່ເຮເຊກີຢາບໍ່ໄດ້ສະຫນອງພຣະຄຸນນັ້ນແກ່ພຣະຢາເວສຳລັບການຊ່ວຍເຫລືອທີ່ພຣະອົງຊົງໄດ້ປຣະທານແກ່ພະອົງ,
ເພາະພະທັຍຂອງພະອົງຈອງຫອງຂຶ້ນ. ພຣະພິໂຣດຈຶ່ງມາເຫນືອພະອົງ, ຢູດາ ແລະເຢຣູຊາເລັມ.[26]ເຖິງຢ່າງໃດກໍຕາມ,

ເຮເຊກີຢາຊົງອ່ອນນ້ອມຖ່ອມພະທັຍທີ່ແຮງນັ້ນລົງ, ທັງພະອົງ ແລະ ຊາວເຢຣູຊາເລັມ,
ພຣະພິໂຣດຂອງພຣະຢາເວຈຶ່ງບໍ່ໄດ້ມາເຫນືອພວກເຂົາທັງຫລາຍໃນຣາຊະການຂອງເຮເຊກີຢາ.
[27]ເຮເຊກີຢາຊົງມີຣາຊະສົມບັດ ແລະ ກຽຕຍົດຍິ່ງໃຫຍ່. ພະອົງຊົງສ້າງຄັງໄວ້ສຳລັບພະອົງ ເພື່ອເກັບເງິນ, ຄຳ, ແລະ ເພັດພອຍຕ່າງໆ, ເຄື່ອງເທດ,
ໂລ່, ແລະ ສຳລັບຊັບສິນທີ່ມີຄ່າທຸກຊະນິດ.[28]ທັງສາງສຳລັບເຂົ້າ, ນ້ຳອະງຸ່ນໃຫມ່, ແລະ ນ້ຳມັນ ທີ່ຜະລິດມາ ແລະ
ໂຮງມ້ຽນສັດລ້ຽງທຸກຊະນິດກັບຄອກແກະ. ພະອົງຍັງມີຝູງສັດຕ່າງໆໃນຄອກຕ່າງໆ.[29]ພະອົງຊົງຈັດຫົວເມືອງເພື່ອພະອົງດ້ວຍ ທັງຝູງແບ້ແກະ
ແລະ ຝູງງົວເປັນຈຳນວນຫລາຍ, ເພາະພຣະເຈົ້າຊົງປຣະທານຊັບສິນໃຫ້ພະອົງຫລວງຫລາຍ.
[30]ເຮເຊກີຢາອົງນີ້ເອງຊົງປິດທາງນ້ຳອອກຕອນເທິງຂອງນ້ຳພຸກີໂຮນເສຍ, ແລະ ເຮັດໃຫ້ໄຫລລົງໄປທາງທິດຕາເວັນຕົກຂອງນະຄອນດາວິດ.
ເຮເຊກີຢາຊົງຈະເຣີນໃນພະຣາຊະກິດທັງຫມົດຂອງພະອົງ.[31]ຢ່າງໃດກໍຕາມ, ໃນເລື່ອງຜູ້ສື່ງຂ່າວທີ່ເຈົ້ານາຍເມືອງບາບີໂລນ,
ຜູ້ໃຊ້ໃຫ້ມາຖາມເຖິງການມະຫັດສະຈັນທີ່ໄດ້ເກີດຂຶ້ນໃນແຜ່ນດິນ, ພຣະເຈົ້າກໍຊົງປ່ອຍພະອົງຕາມໃຈ, ເພື່ອຈະທົດລອງພະອົງ, ແລະ
ເພື່ອຈະຮູ້ຄຳກ່າວທັງຫມົດໃນພະທັຍຂອງພະອົງ.
[32]ຝ່າຍພະຣາຊະກິດນອກນັ້ນຂອງເຮເຊກີຢາ, ລວມທັງຄວາມດີຂອງພະອົງ ກໍມີບັນທຶກໄວ້ໃນນິມິດຂອງເອຊາຢາຜູ້ທຳນວາຍລູກຊາຍອາໂມດ,
ແລະ ໃນຫນັງສືຂອງກະສັດແຫ່ງຢູດາ ແລະອິສະຣາເອນ.[33]ເຮເຊກີຢາລ່ວງລັບໄປຢູ່ກັບບັນພະບຸຣຸດຂອງພະອົງ, ແລະ
ພວກເຂົາຝັງພະສົບໄວ້ໃນຂຸມຝັງສົບສຳຄັນທີ່ສຸດໃນບັນດາລູກຊາຍຂອງດາວິດ. ຄົນຢູດາ ແລະ ຊາວເຢຣູຊາເລັມທັງປວງໄດ້ຖວາຍກຽຕ
ເມື່ອພະອົງສິ້ນພະຊົນ. ມານາເຊລູກຊາຍຂອງພະອົງໄດ້ປົກຄອງແທນພະອົງ.


generated on Tue Jun 17 19:01:42 2025

33 [1]ເມື່ອມານາເຊເລີ່ມປົກຄອງ ພະອົງມີອາຍຸສິບສອງປີ ແລະຊົງປົກຄອງໃນເຢຣູຊາເລັມຫ້າສິບຫ້າປີ.
[2]ພະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ, ຕາມການເຮັດທີ່ຫນ້າກຽດຊັງແຫ່ງປະຊາຊາດ
ຊຶ່ງພຣະຢາເວຊົງຂັບໄລ່ໄປເສຍຈາກປະຊາຊົນອິສະຣາເອນ.[3]ເພາະພະອົງຊົງສ້າງສະຖານທີ່ສັກສິດ ຊຶ່ງເຮເຊກີຢາ
ບິດາຂອງພະອົງໄດ້ຊົງທຳລາຍນັ້ນ. ແລະ ຊົງສ້າງແທ່ນບູຊາແກ່ພະບາອານ, ຊົງເຮັດບັນດາເສົາຮູບເຄົາຣົບ, ແລະ
ຊົງນະມັສະການບໍລິວານທັງຫມົດຂອງຟ້າສະຫວັນ ແລະບົວລະບັດພະເຫລົ່ານັ້ນ.

[4]ພະອົງຊົງສ້າງແທ່ນບູຊາໃນພຣະວິຫານຂອງພຣະຢາເວ, ຊຶ່ງພຣະຢາເວໄດ້ຊົງບັນຊາໄວ້ວ່າ,
“ນາມຊື່ຂອງເຮົາຈະຢູ່ໃນເຢຣູຊາເລັມຕະຫລອດໄປເປັນນິດ.”[5]ພະອົງໄດ້ຊົງສ້າງແທ່ນບູຊາສຳລັບບັນດາບໍລິວານແຫ່ງຟ້າສະຫວັນໃນເດີ່ນທັງສອງແຫ່ງພຣະວິຫານ
[6]ໃນຫຸບເຂົາເບັນຂອງຮິນໂນມພະອົງໄດ້ຊົງໃຫ້ລູກຊາຍຂອງພະອົງບຸກໄຟ ເພື່ອຖືເລີກຍາມ ແລະ ເວດມົນຄາຖາ ແລະ ຕິດຕໍ່ກັບຄົນຊົງ ແລະ
ພໍ່ມົດແມ່ມົດ ຫມໍຜີ. ພະອົງຊົງກະທຳສິ່ງທີ່ຊົ່ວຮ້າຍເປັນຈຳນວນຫລາຍໃນສາຍພຣະເນດຂອງພຣະຢາເວ ແລະ
ເຮັດໃຫ້ພຣະອົງຊົງພຣະພິໂຣດ.
[7]ຮູບເຄົາຣົບສະຫລັກຄື ຮູບເຄົາຣົບທີ່ພະອົງຊົງສ້າງນັ້ນ, ພະອົງຊົງຕັ້ງໄວ້ໃນພຣະວິຫານຂອງພຣະເຈົ້າ. ຊຶ່ງພຣະເຈົ້າກ່າວກັບດາວິດ ແລະ
ໂຊໂລໂມນລູກຊາຍຂອງດາວິດ; ກ່າວວ່າ, “ໃນວິຫານນີ້ແລະ ໃນເຢຣູຊາເລັມ, ຊຶ່ງເຮົາໄດ້ເລືອກອອກຈາກຕະກູນທັງຫມົດຂອງອິສະຣາເອນ,
ເຮົາຈະບັນຈຸນາມຊື່ຂອງເຮົາໄວ້ເປັນນິດ.
[8]ແລະເຮົາຈະບໍ່ໃຫ້ຕີນຂອງອິສະຣາເອນພະເນຈອນອອກໄປຈາກແຜ່ນດິນຊຶ່ງເຮົາໄດ້ກຳນົດໃຫ້ບັນພະບຸຣຸດຂອງເຈົ້າອີກເລີຍ,
ຖ້າພວກເຂົາພຽງແຕ່ລະມັດຣະວັງ ເຮັດທຸກຢ່າງທີ່ເຮົາໄດ້ບັນຊາພວກເຂົາໄວ້ ຄືກົດຫມາຍ, ກົດເກນ, ແລະ
ກົດທັງຫມົດທີ່ໄດ້ໃຫ້ໄວ້ໂດຍທາງໂມເຊ.”[9]ມານາເຊຊົງຊັກຈູງຢູດາ ແລະ ຊາວເຢຣູຊາເລັມໃຫ້ຫລົງໄປ
ພວກເຂົາຈຶ່ງເຮັດຄວາມຊົ່ວຮ້າຍຫລາຍກວ່າບັນດາປະຊາຊາດ ຊຶ່ງພຣະຢາເວໄດ້ຊົງທຳລາຍໃຫ້ພົ້ນຈາກຫນ້າປະຊາຊົນອິສະຣາເອນນັ້ນ.
[10]ພຣະຢາເວກ່າວກັບມານາເຊ, ແລະ ປະຊາຊົນຂອງພະອົງ, ແຕ່ພວກເຂົາທັງຫລາຍບໍ່ຟັງ.[11]ເພາະສະນັ້ນ
ພຣະຢາເວຊົງໃຫ້ຜູ້ບັງຄັບກອງທະຫານຂອງກະສັດແຫ່ງອັດຊີເຣຍມາຕໍ່ສູ້ພວກເຂົາ, ໂດຍເອົາໂຊ່ມັດມານາເຊໄວ້ກັບເຄື່ອງຈອງຈຳ ແລະ
ນຳພະອົງມາບາບີໂລນ.
[12]ເມື່ອມານາເຊຊົງທຸກຍາກ, ພະອົງຊົງອ້ອນວອນຂໍພະກະຣຸນາຕໍ່ພຣະຢາເວ, ພຣະເຈົ້າຂອງພະອົງ, ແລະ
ຊົງຖ່ອມພະທັຍລົງຢ່າງຫລາຍຕໍ່ພຣະພັກພຣະເຈົ້າຂອງບັນພະບຸຣຸດຂອງພະອົງ.[13]ພະອົງຊົງອະທິຖານຕໍ່ພຣະເຈົ້າ; ແລະ
ພຣະເຈົ້າຊົງຟັງຄຳອ້ອນວອນຂອງພະອົງ, ແລະ ໂດຍນຳພະອົງກັບມາເມືອງເຢຣູຊາເລັມ, ໃນຣາຊະອານາຈັກຂອງພະອົງອີກ.
ແລ້ວມານາເຊຊົງຮູ້ວ່າພຣະຢາເວຊົງເປັນພຣະເຈົ້າ.
[14]ພາຍຫລັງ ພະອົງຊົງສ້າງກຳແພງຊັ້ນນອກໃຫ້ນະຄອນດາວິດ, ທາງຕາເວັນຕົກຂອງກີໂຮນ, ໃນພູເຂົາ, ໄປຈົນຮອດທາງເຂົ້າປະຕູປາ.
ພະອົງຊົງສ້າງອ້ອມຮອບໂອເຟນ ແລະ ກໍ່ຂຶ້ນໃຫ້ສູງ. ພະອົງຊົງຕັ້ງຜູ້ບັງຄັບບັນຊາກອງທັບໃຫ້ຢູ່ໃນຫົວເມືອງມີປ້ອມໃນຢູດາທັງຫມົດ.
[15]ພະອົງຊົງເອົາພະຕ່າງດ້າວ, ຮູບເຄົາຣົບໄປເສຍຈາກພຣະວິຫານຂອງພຣະຢາເວ ແລະ
ແທ່ນບູຊາທັງຫມົດທີ່ພະອົງໄດ້ຊົງສ້າງໄວ້ເທິງພູເຂົາແຫ່ງພຣະວິຫານຂອງພຣະຢາເວ ແລະ ໃນເຢຣູຊາເລັມ, ແລະ
ພະອົງຊົງຖິ້ມອອກໄປນອກເມືອງ.
[16]ພະອົງຊົງສ້ອມແປງແທ່ນບູຊາຂອງພຣະຢາເວ ແລະ ຊົງຖວາຍເຄື່ອງສັດບູຊາເປັນເຄື່ອງບູຊາເພື່ອຄວາມສາມັກຄີທັມ ແລະ
ເຄື່ອງໂມທະນາພຣະຄຸນເທິງແທ່ນນັ້ນ; ພະອົງຊົງບັນຊາໃຫ້ຢູດາບົວລະບັດພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ.[17]ເຖິງປານນັ້ນກໍດີ,
ປະຊາຊົນກໍຍັງຖວາຍສັດບູຊາທີ່ສະຖານທີ່ສັກສິດ, ແຕ່ຖວາຍຕໍ່ພຣະຢາເວພຣະເຈົ້າຂອງພວກເຂົາເທົ່ານັ້ນ.
[18]ສ່ວນພະຣາຊະກິດອື່ນໆ ຂອງມານາເຊ, ແລະ ຄຳອະທິຖານຂອງພະອົງຕໍ່ພຣະເຈົ້າ, ແລະ ຖ້ອຍຄຳຂອງຜູ້ທຳນວາຍ
ຜູ້ທູນພະອົງໃນພຣະນາມຊື່ຂອງພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ກໍມີບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງອິສະຣາເອນ.
[19]ໃນບັນທຶກນັ້ນໄດ້ມີເລື່ອງ ຄຳອະທິຖານຂອງຂອງພະອົງ, ແລະເລື່ອງທີ່ພຣະເຈົ້າຊົງຮັບຄຳອ້ອນວອນຂອງພະອົງ. ແລະ
ເລື່ອງຂອງຄວາມບາບທັງຫມົດຂອງພະອົງ ແລະ ການບໍ່ສັດຊື່ຂອງພະອົງ ແລະ ສະຖານທີ່ສັກສິດຊຶ່ງພະອົງຊົງສ້າງ ແລະ
ຕັ້ງບັນດາເສົາຮູບເຄົາຣົບ ກັບຮູບເຄົາຣົບສະຫລັກ, ກ່ອນທີ່ພະອົງຊົງຖ່ອມພະອົງລົງນັ້ນ
ພວກເຂົາບັນທຶກໄວ້ໃນຫນັງສືປະຫວັດທີ່ຜູ້ທຳນວາຍຂຽນ.[20]ແລ້ວມານາເຊຈຶ່ງຊົງລ່ວງລັບໄປຢູ່ກັບບັນພະບຸຣຸຂອງພະອົງ, ແລະ
ພວກເຂົາຝັງພະສົບໄວ້ໃນພະຣາຊະວັງຂອງພະອົງ. ອາໂມນ, ລູກຊາຍຂອງພະອົງໄດ້ປົກຄອງແທນພະອົງ.
[21]ອາໂມນເລີ່ມປົກຄອງ ພະອົງມີອາຍຸຊາວສອງປີ; ແລະຊົງປົກຄອງໃນເຢຣູຊາເລັມສອງປີ.
[22]ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ, ແບບມານາເຊ, ບິດາຂອງພະອົງຊົງກະທຳນັ້ນ.
ອາໂມນຖວາຍສັດບູຊາແກ່ຮູບເຄົາຣົບສະຫລັກທັງຫມົດທີ່ມານາເຊພໍ່ຂອງພະອົງໄດ້ຊົງສ້າງຂຶ້ນ, ແລະ ຊົງບົວລະບັດຮູບເຄົາຣົບນັ້ນ.
[23]ພະອົງບໍ່ໄດ້ຖ່ອມພະອົງລົງຕໍ່ພຣະພັກພຣະຢາເວ, ຄືມານາເຊ ບິດາຂອງພະອົງໄດ້ຖ່ອມລົງນັ້ນ. ແຕ່ອາໂມນອົງນີ້ໄດ້ກໍ່ກັມຫລາຍຂຶ້ນ.
[24]ຂ້າຣາຊະການຂອງພະອົງກໍຮ່ວມກັນຄິດກະບົດຕໍ່ພະອົງ ໂດຍໄດ້ຂ້າພະອົງເສຍໃນພະຣາຊະວັງຂອງພະອົງ.
[25]ແຕ່ປະຊາຊົນແຫ່ງແຜ່ນດິນໄດ້ປຣະຫານບັນດາຄົນເຫລົ່ານັ້ນທີ່ຄິດກະບົດຕໍ່ກະສັດອາໂມນ, ແລະ
ປະຊາຊົນແຫ່ງແຜ່ນດິນໄດ້ແຕ່ງຕັ້ງໃຫ້ໂຢສີຢາ, ລູກຊາຍຂອງພະອົງຂຶ້ນປົກຄອງແທນພະອົງ.

 generated on Tue Jun 17 19:01:42 2025

# 34

1 ເມື່ອໂຢສີຢາເລີ່ມປົກຄອງ ພະອົງມີອາຍຸແປດປີ; ແລະຊົງປົກຄອງໃນເຢຣູຊາເລັມສາມສິບເອັດປີ.
2 ພະອົງຊົງກະທຳສິ່ງທີ່ພໍພຣະທັຍໃນສາຍພຣະເນດຂອງພຣະຢາເວ, ແລະ ດຳເນີນໃນເສັ້ນທາງຂອງດາວິດບັນພະບຸຣຸດຂອງພະອົງ, ແລະ
ບໍ່ໄດ້ຊົງຫັນໄປທາງຂວາ ຫລື ທາງຊ້າຍ. 3 ເພາະໃນປີທີແປດແຫ່ງຣາຊະການຂອງພະອົງ, ເມື່ອພະອົງຍັງຊົງເປັນເດັກນ້ອຍຢູ່,
ພະອົງຊົງເລີ່ມສະແຫວງຫາພຣະເຈົ້າຂອງດາວິດບັນພະບຸຣຸດຂອງພະອົງ. ໃນປີທີສິບສອງ, ພະອົງຊົງເລີ່ມກວາດລ້າງຢູດາ ແລະ
ເຢຣູຊາເລັມດ້ວຍການກຳຈັດສະຖານທີ່ສັກສິດ, ທັງບັນດາເສົາຮູບເຄົາຣົບ ແລະ ຮູບເຄົາຣົບແກະສະຫລັກກັບຮູບເຄົາຣົບຫລໍ່.

4 ປະຊາຊົນທຳລາຍແທ່ນບູຊາພະບາອານລົງຕໍ່ພະພັກຂອງພະອົງ; ພະອົງຊົງລົ້ມບັນດາຮູບເຄົາຣົບ ທີ່ຕັ້ງຢູ່ເທິງນັ້ນລົງ.
ພະອົງຊົງທຸບບັນດາເສົາຮູບເຄົາຣົບ ແລະ ຮູບເຄົາຣົບແກະສະຫລັກກັບຮູບເຄົາຣົບ ຫລໍ່ເປັນທ່ອນ, ແລະ ຊົງກະທຳໃຫ້ເປັນຝຸ່ນ.
ພະອົງໄດ້ໂຮຍຜົງເທິງຂຸມສົບຂອງບັນດາຄົນທີ່ຖວາຍສັດບູຊາແກ່ພະເຫລົ່ານັ້ນ. 5 ພະອົງຊົງເຜົາກະດູກຂອງປະໂລຫິດເທິງແທ່ນພະເຫລົ່ານັ້ນ.
ດ້ວຍເຫດນີ້, ພະອົງຊົງກວາດລ້າງຢູດາ ກັບເຢຣູຊາເລັມ.
6 ພະອົງຊົງກະທຳເຊັ່ນກັນໃນຫົວເມືອງຂອງມານາເຊ, ເອຟຣາຢິມ, ແລະ ຊີເມໂອນ, ໄປຮອດນັບທາລີ, ແລະ ໃນທີ່ຫັກພັງໂດຍອ້ອມຮອບ.
7 ເມື່ອພະອົງຊົງທຳລາຍແທ່ນບູຊາ, ບັນດາເສົາຮູບເຄົາຣົບ ແລະ ຊົງທຸບຮູບເຄົາຣົບສະຫລັກໃຫ້ເປັນຝຸ່ນ, ແລະ
ຊົງລົ້ມບັນດາຮູບເຄົາຣົບທັງຫມົດລົງທົ່ວແຜ່ນດິນອິສະຣາເອນ; ແລ້ວພະອົງສະເດັດກັບເຢຣູຊາເລັມ.
8 ໃນປີທີສິບແປດແຫ່ງຣາຊະການຂອງພະອົງ, ເມື່ອພະອົງຊົງກວາດລ້າງແຜ່ນດິນ ແລະ ພຣະວິຫານແລ້ວ,
ພະອົງຊົງໃຊ້ຊາຟານລູກຊາຍອາຊາລີຢາ ແລະ ມາອາເສຢາຜູ້ວ່າຣາຊະການນະຄອນ ແລະ ໂຢອາລູກຊາຍ
ໂຢອາຮັດຂ້າຣາຊະການຊັ້ນຜູ້ໃຫຍ່ ໃຫ້ສ້ອມແປງພຣະວິຫານຂອງພຣະຢາເວພຣະເຈົ້າຂອງພະອົງ. 9 ເມື່ອພວກເຂົາມາຫາຮິນກີຢາ,
ມະຫາປະໂລຫິດແລ້ວ, ແລະ ໄດ້ມອບເງິນທີ່ຄົນທັງຫລາຍນຳມາພຣະວິຫານຂອງພຣະເຈົ້າ, ຊຶ່ງຄົນເລວີ, ຜູ້ເຝົ້າປະຕູໄດ້ເກັບຈາກມານາເຊ
ແລະ ເອຟຣາຢິມ, ແລະ ຈາກບັນດາຄົນທີ່ເຫລືອຂອງອິສະຣາເອນ ແລະ ຈາກຢູດາກັບເບັນຢາມິນທັງຫມົດ, ແລ້ວພວກເຂົາກັບໄປເຢຣູຊາເລັມ.
10 ພວກເຂົາມອບເງິນໃຫ້ແກ່ຜູ້ເບິ່ງແຍງພຣະວິຫານຂອງພຣະຢາເວ. ພວກເຂົາເຫລົ່ານີ້ໄດ້ມອບເງິນໃຫ້ແກ່ຜູ້ເຮັດວຽກຢູ່ໃນພຣະວິຫານ
ເພື່ອການສ້ອມແປງພຣະວິຫານໃຫ້ຫມັ້ນຄົງ. 11 ພວກເຂົາໄດ້ຈ່າຍເງິນນັ້ນແກ່ພວກຊ່າງໄມ້ ແລະ ພວກກໍ່ສ້າງເພື່ອຈະຊື້ຫີນສະຫລັກ ແລະ
ໄມ້ກະດານເພື່ອປະກອບເປັນຄານສຳລັບອາຄານ ທີ່ກະສັດແຫ່ງຢູດາໄດ້ປ່ອຍໃຫ້ຊຸດໂຊມ.
12 ຄົນທັງຫລາຍກໍ່ເຮັດງານຢ່າງສັດຊື່. ຜູ້ຄຸມງານມີຢາຮາດແລະ ໂອບາດີຢາ, ຄົນເລວີ, ລູກຫລານຂອງເມຣາຣີ; ແລະເຊຄາຣີຢາ ກັບເມຊຸນລຳ,
ລູກຫລານຂອງຄົນໂກຮາດເປັນຜູ້ເບິ່ງແຍງ ຄົນເລວີທຸກຄົນທີ່ຊຳນານເຄື່ອງດົນຕຣີ. 13 ພວກຄົນເລວີເຫລົ່ານີ້ເປັນຜູ້ເບິ່ງແຍງຄົນຫາມເຄື່ອງ ແລະ
ບັນດາຄົນທີ່ເຮັດວຽກບົວລະບັດທຸກຢ່າງ. ຄົນເລວີບາງຄົນເປັນຄົນຮັກສາ, ເປັນເຈົ້າຫນ້າທີ່ ແລະ ເປັນຄົນເຝົ້າຍາມປະຕູ.
14 ຂະນະທີ່ພວກເຂົາທັງຫລາຍນຳເງິນທີ່ໄດ້ຖວາຍໃນພຣະວິຫານຂອງພຣະຢາເວອອກມາ,
ຮິນກີຢາປະໂລຫິດໄດ້ພົບຫນັງສືພຣະບັນຍັດຂອງພຣະຢາເວທີ່ຊົງປະທານທາງໂມເຊ. 15 ແລະ ຮິນກີຢາເວົ້າກັບຊາຟານເລຂາວ່າ,
"ຂ້າພະເຈົ້າໄດ້ພົບຫນັງສືພຣະບັນຍັດໃນພຣະວິຫານຂອງພຣະຢາເວ" ແລະ ຮິນກີຢາກໍ່ມອບຫນັງສືນັ້ນໃຫ້ຊາຟານ.
16 ຊາຟານໄດ້ນຳຫນັງສືໄປຖວາຍກະສັດ ແລະ ທູນລາຍງານກະສັດວ່າ, "ສິ່ງທັງປວງທີ່ພະອົງຊົງມອບຫມາຍແກ່ຜູ້ຮັບໃຊ້ຂອງພະອົງໃຫ້ເຮັດນັ້ນ
ພວກເຂົາກຳລັງເຮັດຢູ່ແລ້ວ."
17 ພວກເຂົາຮວບຮວມເງິນຊຶ່ງພົບໃນພຣະວິຫານຂອງພຣະຢາເວ, ແລະ ໄດ້ມອບໄວ້ໃນມືຂອງຜູ້ເບິ່ງແຍງ ແລະ ຄົນງານ.
18 ຊາຟານເລຂາທູນກະສັດວ່າ, "ຮິນກີຢາປະໂລຫິດໄດ້ມອບຫນັງສືແກ່ຂ້າພະອົງມ້ວນຫນຶ່ງ." ແລ້ວຊາຟານກໍ່ອ່ານຖວາຍຕໍ່ພະພັກກະສັດ.
19 ຢູ່ມາເມື່ອກະສັດຊົງຮັບຟັງຖ້ອຍຄຳຂອງພຣະບັນຍັດນັ້ນ, ພະອົງຊົງຈີກເສື້ອຜ້າຂອງພະອົງ.
20 ກະສັດຊົງບັນຊາແກ່ຮິນກີຢາ, ອາຮີກາມລູກຊາຍຊາຟານ, ອັບໂດນລູກຊາຍມີກາ, ຊາຟານເລຂາ, ແລະ ອາສາຢາຜູ້ຮັບໃຊ້ຂອງກະສັດ,
ຂ້າຣາຊະການຂອງພະອົງກ່າວວ່າ, 21 "ຈົ່ງໄປທູນຖາມພຣະຢາເວໃຫ້ແກ່ເຮົາ, ແລະ ໃຫ້ແກ່ບັນດາຜູ້ທີ່ເຫລືອຢູ່ໃນອິສະຣາເອນ ແລະ ໃນຢູດາ,
ກ່ຽວກັບຖ້ອຍຄຳໃນຫນັງສືທີ່ໄດ້ພົບນັ້ນ. ເພາະວ່າພຣະພິໂຣດຂອງພຣະຢາເວທີ່ຖອກລົງເຫນືອເຮົານັ້ນຍິ່ງໃຫຍ່ຫລາຍ.
ດ້ວຍວ່າບັນພະບຸຣຸດຂອງເຮົາບໍ່ໄດ້ຮັກສາພຣະທັມຂອງໃນຫນັງສືນີ້ ຕາມທີ່ຂຽນໄວ້ໃນຫນັງສືນີ້ທຸກປະການ."
22 ດັ່ງນັ້ນຮິນກີຢາ, ແລະ ຄົນເຫລົ່ານັ້ນທີ່ກະສັດຊົງໃຊ້ໄປຈຶ່ງ, ໄປຫາຮຸນດາຍິງຜູ້ທຳນວາຍເມຍຂອງຊານລູມ, ລູກຊາຍຕິກວາ
ລູກຊາຍຮາສະຣາຜູ້ເບິ່ງແຍງເສື້ອຜ້າຂອງພະອົງ (ນາງຢູ່ໃນເຢຣູຊາເລັມໃນເມືອງທີ່ສອງ ຫລືເຂດທີ່ສ້າງຂຶ້ນໃຫມ່) ແລະ
ເວົ້າກັບນາງເຖິງເລື່ອງນັ້ນ.
23 ນາງເວົ້າກັບພວກເຂົາວ່າ, "ພຣະຢາເວພຣະເຈົ້າແຫ່ງອິສະຣາເອນ, ກ່າວດັ່ງນີ້ວ່າ: ຈົ່ງບອກຊາຍຜູ້ທີ່ໃຊ້ພວກເຈົ້າໃຫ້ມາຫາເຮົາວ່າ,
24 'ພຣະຢາເວກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຈະນຳເຫດຊົ່ວຮ້າຍມາເຫນືອສະຖານທີ່ນີ້ ແລະ ເຫນືອຊາວເມືອງນີ້
ຄືຄຳສາບແຊ່ງທັງຫມົດທີ່ບັນທຶກໄວ້ໃນຫນັງສືຊຶ່ງໄດ້ອ່ານຖວາຍຕໍ່ພຣະພັກກະສັດແຫ່ງຢູດານັ້ນ. 25 ເພາະວ່າພວກເຂົາໄດ້ປະຖິ້ມເຮົາ ແລະ
ໄດ້ເຜົາເຄື່ອງຫອມຖວາຍພະອື່ນ, ເພື່ອພວກເຂົາຈະເຮັດໃຫ້ເຮົາຮ້າຍດ້ວຍການງານທັງຫມົດແຫ່ງມືຂອງພວກເຂົາ. ເພາະສະນັ້ນ
ພຣະພິໂຣດຂອງເຮົາຈະຖອກລົງເຫນືອສະຖານທີ່ນີ້ ແລະ ຈະດັບບໍ່ໄດ້.'
26 ແຕ່ກະສັດຂອງຢູດາ, ຜູ້ໃຊ້ເຈົ້າໃຫ້ມາທູນພຣະຢາເວນັ້ນ ເຈົ້າຈົ່ງທູນທ່ານດັ່ງນີ້ວ່າ, 'ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນກ່າວດັ່ງນີ້ວ່າ:
ເລື່ອງຖ້ອຍຄຳທີ່ເຈົ້າໄດ້ຍິນນັ້ນ, 27 ເພາະຈິດໃຈຂອງເຈົ້າອ່ອນແອ, ແລະ ເຈົ້າໄດ້ຖ່ອມຕົວລົງຕໍ່ພຣະພັກພຣະເຈົ້າ
ເມື່ອເຈົ້າໄດ້ຍິນຖ້ອຍຄຳທີ່ກ່າວຕໍ່ສູ້ສະຖານທີ່ນີ້ ແລະ ຊາວເມືອງນີ້, ເຈົ້າໄດ້ຖ່ອມຕົວລົງຕໍ່ຫນ້າເຮົາ ແລະ ເຈົ້າໄດ້ຈີກເສື້ອຜ້າຂອງເຈົ້າ ແລະ
ຮ້ອງໄຫ້ຕໍ່ຫນ້າເຮົາ ພຣະຢາເວກ່າວວ່າ ເຮົາໄດ້ຟັງເຈົ້າດ້ວຍ—ນີ້ເປັນຄຳປະກາດຂອງພຣະຢາເວ— 28 ເບິ່ງແມ,
ເຮົາຈະພາເຈົ້າໄປຢູ່ກັບບັນພະບຸຣຸດຂອງເຈົ້າ. ພວກເຂົາຈະພາເຈົ້າໄປສູ່ບ່ອນຝັງສົບຢ່າງສັນຕິ, ແລະ
ຕາຂອງເຈົ້າຈະບໍ່ເຫັນບັນດາເຫດຊົ່ວຮ້າຍທີ່ເຮົາຈະນຳມາເຫນືອສະຖານທີ່ນີ້ ແລະ ຊາວເມືອງນີ້.'"
ພວກເຂົາທັງຫລາຍຈຶ່ງນຳພຣະທັມກັບມາຫາກະສັດ.


generated on Tue Jun 17 19:01:42 2025

[29]ແລ້ວກະສັດຮັບສັ່ງໃຫ້ຮວບຮວມບັນດາຜູ້ໃຫຍ່ຂອງຢູດາແລະ ເຢຣູຊາເລັມ.[30]ແລ້ວກະສັດສະເດັດຂຶ້ນໄປພຣະວິຫານຂອງພຣະຢາເວ,
ພ້ອມກັບຄົນທັງປວງຂອງຢູດາ ແລະ ຊາວເຢຣູຊາເລັມກັບປະໂລຫິດ ແລະ ຄົນເລວີຄົນທັງປວງທັງໃຫຍ່ ແລະ ນ້ອຍ.
ພະອົງຊົງອ່ານຖ້ອຍຄຳທັງຫມົດໃນຫນັງສືຄຳຫມັ້ນສັນຍາທີ່ພົບໃນພຣະວິຫານຂອງພຣະຢາເວໃຫ້ພວກເຂົາຟັງ.
[31]ກະສັດປຣະທັບຢືນຢູ່ໃນບ່ອນຂອງພະອົງ ແລະ ເຮັດຄຳຫມັ້ນສັນຍາຕໍ່ພຣະພັກພຣະຢາເວ,ວ່າຈະຊົງດຳເນີນຕາມພຣະຜູ້ເປັນເຈົ້າ, ແລະ
ຮັກສາພຣະບັນຍັດ ແລະ ກົດເກນຂອງພຣະອົງດ້ວຍສຸດຈິດສຸດໃຈ,
ຈະຊົງປະກອບກິດຕາມຖ້ອຍຄຳຂອງຄຳຫມັ້ນສັນຍາຊຶ່ງບັນທຶກໄວ້ໃນຫນັງສືມ້ວນນີ້,[32]ແລ້ວພະອົງຊົງຮັບສັ່ງບັນດາຜູ້ທີ່ຢູ່ໃນເຢຣູຊາເລັມ ແລະ
ໃນເບັນຢາມິນໃຫ້ເຂົ້າສ່ວນໃນຄຳຫມັ້ນສັນຍານັ້ນ. ແລະຊາວເຢຣູຊາເລັມກໍເຮັດຕາມຄຳຫມັ້ນສັນຍາຂອງພຣະເຈົ້າ
ພຣະເຈົ້າຂອງບັນພະບຸຣຸດຂອງພວກເຂົາທັງຫລາຍ.
[33]ໂຢສີຢາໄດ້ເອົາສິ່ງຫນ້າກຽດຊັງທັງປວງໄປເສຍຈາກເຂດແດນທັງຫມົດທີ່ເປັນຂອງປະຊາຊົນອິດສະຣາເອນ.
ຊົງກະທຳໃຫ້ບັນດາຜູ້ທີ່ຢູ່ໃນອິສະຣາເອນບົວລະບັດພຣະຢາເວ, ພຣະເຈົ້າຂອງພວກເຂົາ. ຕະຫລອດຣາຊະການຂອງພະອົງ,
ພວກເຂົາບໍ່ໄດ້ຫັນໄປຈາກການຕິດຕາມພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ.


generated on Tue Jun 17 19:01:42 2025

35 [1]ໂຢສີຢາຊົງຖືເທສະການປັດສະຄາຖວາຍແດ່ພຣະຢາເວໃນເມືອງເຢຣູຊາເລັມ, ແລະ
ພວກເຂົາຂ້າແກະປັດສະຄາໃນວັນທີສິບສີ່ຂອງເດືອນຕົ້ນ.[2]ພະອົງຊົງແຕ່ງຕັ້ງປະໂລຫິດໃຫ້ປະຈຳຫນ້າທີ່ ແລະ
ຊົງສະຫນັບສະຫນູນພວກເຂົາໃນການບົວລະບັດພຣະວິຫານແຫ່ງພຣະຢາເວ.

[3]ພະອົງກ່າວກັບຄົນເລວີ ຜູ້ບໍຣິສຸດສະເພາະພຣະຢາເວ, ຜູ້ສອນອິສະຣາເອນທັງປວງວ່າ,
"ຈົ່ງວາງຫີບບໍຣິສຸດໄວ້ໃນພຣະວິຫານທີ່ໂຊໂລໂມນລູກຊາຍຂອງດາວິດ, ກະສັດຂອງອິສະຣາເອນຊົງສ້າງໄວ້.
ເຈົ້າທັງຫລາຍບໍ່ຕ້ອງໃສ່ບ່າຫາມໄປອີກ. ບັດນີ້ຈົ່ງບົວຣະບັດພຣະຢາເວພຣະເຈົ້າຂອງເຈົ້າ ແລະ ອິສະຣາເອນປະຊາຊົນຂອງພຣະອົງ
[4]ຕາມບັນທຶກພະຣາຊະດຳລັດຊີ້ແຈງຂອງດາວິດກະສັດແຫ່ງອິສະຣາເອນ ແລະ ຕາມບັນທຶກພະຣາຊະດຳຣັດຊີ້ແຈງຂອງໂຊໂລໂມນ,
ລູກຊາຍຂອງພະອົງ.
[5]ຈົ່ງຢືນປະຈຳຢູ່ໃນສະຖານທີ່ບໍຣິສຸດ, ຕາມຕຳແຫນ່ງຂອງພວກເຈົ້າ ພ້ອມກອງຕ່າງໆ ຕາມຊື່ຄອບຄົວຂອງບັນພະບຸຣຸດທີ່ເປັນພີ່ນ້ອງຂອງທ່ານ,
ບັນດາເຊື້ອສາຍຂອງເປັນປະຊາຊົນ, ແລະ ຕາມສ່ວນແບ່ງຂອງແຕ່ລະຄອບຄົວຂອງຄົນເລວີ.[6]ຈົ່ງຂ້າແກະປັດສະຄາຊຳຣະຕົນໃຫ້ບໍຣິສຸດ, ແລະ
ຕຽມແກະໄວ້ໃຫ້ພີ່ນ້ອງຂອງເຈົ້າ, ເພື່ອໃຫ້ພວກເຂົາເຮັດຕາມພຣະທັມຂອງພຣະຢາເວຊຶ່ງຊົງປຣະທານໄວ້ກັບໂມເຊນັ້ນ."
[7]ໂຢສີຢາໄດ້ຊົງບໍຣິຈາກແກ່ປະຊາຊົນເປັນເຄື່ອງປັດສະຄາບູຊາສຳລັບຄົນທັງປວງທີ່ຢູ່ບ່ອນນັ້ນເປັນລູກແກະ ແລະ
ລູກແບ້ຈາກຝູງແບ້ແກະຈຳນວນສາມຫມື່ນໂຕ. ພະອົງຍັງໄດ້ຊົງປຣະທານງົວເຖິກສາມພັນໂຕ; ສັດເຫລົ່ານີ້ໄດ້ມາຈາກຊັບສິນຂອງກະສັດ.
[8]ເຈົ້ານາຍຂອງພະອົງບໍຣິຈາກດ້ວຍຄວາມເຕັມໃຈແກ່ປະຊາຊົນ, ແກ່ປະໂລຫິດ, ແລະ ແກ່ຄົນເລວີ. ຮິນກີຢາ, ເຊຄາຣີຢາ, ແລະ ເຢຮີເອນ,
ເຈົ້າຫນ້າທີ່ຊັ້ນຫົວຫນ້າຂອງພຣະວິຫານແຫ່ງພຣະເຈົ້າ, ໄດ້ມອບລູກແກະ ແລະລູກແບ້ 2,600
ໂຕກັບງົວເຖິກສາມຮ້ອຍໂຕແກ່ປະໂລຫິດເປັນເຄື່ອງປັດສະຄາບູຊາ.[9]ສ່ວນໂຄນານີຢາ, ແລະ ເຊມາຢາ, ກັບເນທາເນນ,
ພວກນ້ອງຊາຍຂອງພວກເຂົາ, ຮາຊາບີຢາ ແລະເຢອີເອນ, ກັບໂຢຊາບັດ, ຫົວຫນ້າຂອງຄົນເລວີ, ໄດ້ໃຫ້ລູກແກະ ແລະ
ລູກແບ້ຫ້າພັນໂຕກັບງົວເຖິກຫ້າຮ້ອຍໂຕ ແກ່ຄົນເລວີເປັນເຄື່ອງປັດສະຄາບູຊາ.
[10]ເມື່ອຕຽມການຮຽບຮ້ອຍແລ້ວ, ບັນດາປະໂລຫິດກໍຢືນປະຈຳຫນ້າທີ່ຂອງຕົນ ແລະ ຄົນເລວີກໍຢູ່ຕາມຫມວດຂອງຕົນ,
ຕາມພະບັນຊາຂອງກະສັດ.[11]ພວກເຂົາກໍຂ້າແກະປັດສະຄາ, ແລະ ປະໂລຫິດກໍເອົາເລືອດຊຶ່ງຮັບຈາກມືພວກເຂົາມາຊິດໃສ່
ສ່ວນຄົນເລວີກໍລອກຫນັງສັດນັ້ນ.[12]ແລ້ວພວກເຂົາກໍແຍກສ່ວນທີ່ເປັນເຄື່ອງເຜົາບູຊາໄວ້ຕ່າງຫາກ, ເພື່ອແຈກຢາຍໄດ້ຕາມພວກຕ່າງ
ຜູ້ເປັນປະຊາຊົນທີ່ແບ່ງເປັນແຕ່ລະຄອບຄົວ, ໃຫ້ຖວາຍແດ່ພຣະຢາເວ, ດັ່ງທີ່ບັນທຶກໄວ້ໃນຫນັງສືຂອງໂມເຊ.
ພວກເຂົາເຮັດກັບງົວເຖິກທຳນອງດຽວກັນນີ້.
[13]ພວກເຂົາກໍປີ້ງແກະປັດສະຄາດ້ວຍໄຟຕາມກົດ. ເພື່ອເປັນເຄື່ອງບູຊາທີ່ບໍຣິສຸດ, ພວກເຂົາຕົ້ມເຄື່ອງບູຊາບໍຣິສຸດອື່ນໃນຫມໍ້ດິນ, ໃນຫມໍ້ນ້ຳຊາ,
ແລະ ໃນກະທະ, ແລະ ນຳໄປໃຫ້ປະຊາຊົນທັງປວງໂດຍໄວ.[14]ພາຍຫລັງພວກເຂົາຈຶ່ງຈັດຕຽມເຄື່ອງບູຊາສຳລັບຕົນເອງ ແລະ
ແກ່ບັນດາປະໂລຫິດ, ເພາະວ່າປະໂລຫິດລູກຫລານຂອງອາໂຣນ, ຕ້ອງກະກຽມໃນການຖວາຍເຄື່ອງເຜົາບູຊາ ແລະ
ສ່ວນໄຂມັນຈົນຮອດກາງຄືນ, ດັ່ງນັ້ນຄົນເລວີຈຶ່ງຕຽມເຄື່ອງບູຊາ ເພື່ອຕົນເອງ ແລະ ເພື່ອປະໂລຫິດລູກຫລານຂອງອາໂຣນ.
[15]ບັນດານັກຮ້ອງທີ່ເປັນລູກຫລານຂອງອາສັບ, ຢູ່ປະຈຳທີ່ຂອງຕົນ, ຕາມບັນຊາຂອງດາວິດ, ອາສັບ, ແລະ ເຮມານ
ກັບເຢດູທູນຜູ້ທຳນວາຍຂອງກະສັດ, ແລະ ຄົນເຝົ້າປະຕູກໍຢູ່ປະຈຳທຸກປະຕູ. ພວກເຂົາບໍ່ໃຫ້ປະວຽກງານຫນ້າທີ່ຂອງຕົນ
ເພາະຄົນເລວີພີ່ນ້ອງຂອງພວກເຂົາໄດ້ຈັດຕຽມໄວ້ໃຫ້ພວກເຂົາແລ້ວ.
[16]ໃນເວລານັ້ນ, ພວກເຂົາຈຶ່ງຕຽມການບົວລະບັດທັງຫມົດແດ່ພຣະຢາເວໃນມື້ດຽວນັ້ນ ເພື່ອຈະຖືເທສະການປັດສະຄາ ແລະ
ຖວາຍເຄື່ອງເຜົາບູຊາເທິງແທ່ນບູຊາຂອງພຣະຢາເວ, ຕາມພະບັນຊາຂອງກະສັດໂຢສີຢາ.
[17]ປະຊາຊົນອິສະຣາເອນຜູ້ຢູ່ບ່ອນນັ້ນໄດ້ຖືເທສະການປັດສະຄາເວລານັ້ນ, ແລະ ເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງເຈັດມື້.
[18]ຕັ້ງແຕ່ສມັຍຂອງຜູ້ທຳນວາຍຊາມູເອນ ກໍບໍ່ມີເທສະການປັດສະຄາຄືຢ່າງນີ້ໃນອິສະຣາເອນ,
ບໍ່ມີກະສັດແຫ່ງອິສະຣາເອນຈັກອົງຫນຶ່ງທີ່ຖືເທສະການປັດສະຄາຢ່າງທີ່ໂຢສີຢາໄດ້ຊົງຖືນີ້, ບັນດາປະໂລຫິດກັບຄົນເລວີ, ແລະ
ຢູດາກັບອິສະຣາເອນທັງປວງທີ່ຢູ່ພ້ອມກັນ, ແລະ ທັງຊາວເຢຣູຊາເລັມ.[19]ເຂົາຖືເທສະການປັດສະຄານີ້ໃນປີທີສິບແປດແຫ່ງຣາຊະການໂຢສີຢາ.
[20]ຫລັງຈາກສິ່ງທັງປວງເຫລົ່ານີ້, ເມື່ອໂຢສີຢາໄດ້ຈັດຕຽມພຣະວິຫານໄວ້
ເນໂກກະສັດແຫ່ງເອຢິບໄດ້ສະເດັດຂຶ້ນໄປສູ້ຮົບທີ່ກາເກມິດຢູ່ແມ່ນ້ຳເອຟຣາດ ແລະ ໂຢສີຢາກໍສະເດັດອອກໄປສູ້ຮົບກັບພະອົງ.
[21]ແຕ່ເນໂຄໄດ້ສົ່ງທູດໄປຖາມພະອົງວ່າ, "ກະສັດແຫ່ງຢູດາເອີຍ ເຮົາກັບທ່ານກ່ຽວຂ້ອງກັນຢ່າງໃດ? ມື້ນີ້ເຮົາບໍ່ໄດ້ມາຕໍ່ສູ້ທ່ານ,
ແຕ່ຕໍ່ສູ້ກັບເຊື້ອສາຍທີ່ເຮົາເຮັດສົງຄາມດ້ວຍ. ເພາະພຣະເຈົ້າຊົງບັນຊາເຮົາໃຫ້ຮີບລົງມືເຮັດ ຂໍຢ່າຂັດຂວາງພຣະເຈົ້າ, ຜູ້ຊົງສະຖິດຢູ່ກັບເຮົາ,
ຫລື ຢ້ານວ່າພຣະອົງຈະຊົງທຳລາຍທ່ານເສຍ."
[22]ເຖິງປານນັ້ນກໍດີ, ໂຢສີຢາບໍ່ໄດ້ຫັນພະພັກໄປຈາກພະອົງ ແຕ່ຊົງປອມພະອົງ. ພະອົງໄດ້ຊົງປອມພະອົງເພື່ອຈະສູ້ຮົບກັບພະອົງ.
ພະອົງບໍ່ໄດ້ຟັງພະດຳຣັດຂອງເນໂກທີ່ອອກຈາກພຣະໂອດຂອງພຣະເຈົ້າ; ແຕ່ເຂົ້າຮົບໃນພູເຂົາເມກິດໂດ.
[23]ນັກທະນູໄດ້ຍິງກະສັດໂຢສີຢາ, ແລະ ກະສັດໂຢສີຢາກ່າວກັບຂ້າຣາຊະການຂອງພະອົງວ່າ, "ຈົ່ງພາເຮົາໄປເສຍ,
ເພາະເຮົາຖືກບາດເຈັບສາຫັດແລ້ວ."[24]ຂ້າຣາຊະການຂອງພະອົງຈຶ່ງນຳພະອົງອອກຈາກຣົດຮົບ ແລະ
ໃຫ້ພະອົງປຣະທັບໃນຣົດຮົບຄັນທີສອງຂອງພະອົງ. ພວກເຂົາພາພະອົງມາເຢຣູຊາເລັມ, ຕໍ່ມາພະອົງກໍສິ້ນພະຊົນ.
ພວກເຂົາຝັງພະສົບໄວ້ໃນອຸບໂມງແຫ່ງບັນພະບຸຣຸດຂອງພະອົງ. ຢູດາ ແລະ ເຢຣູຊາເລັມທັງປວງໄດ້ໄວ້ທຸກໃຫ້ໂຢສີຢາ.
[25]ເຢເຣມີຢາກ່າວບົດເພງຄຳຄວນຖວາຍໂຢສີຢາດ້ວຍ, ແລະບັນດານັກຮ້ອງຊາຍ ແລະ
ນັກຮ້ອງຍິງທັງປວງກ່າວເຖິງໂຢສີຢາໃນບົດເພງຂອງເພິ່ນຈົນທຸກມື້ນີ້. ພວກເຂົາເຮັດເລື່ອງນີ້ໃຫ້ເປັນກົດໃນອິສະຣາເອນ;
ເພງນີ້ກໍມີບັນທຶກໄວ້ໃນຫນັງສືເພງຄຳຄວນ.[26]ສຳລັບພະຣາຊະກິດຂອງໂຢສີຢາ ແລະ
ຄວາມດີຂອງພະອົງຕາມທີ່ບັນທຶກໄວ້ໃນພຣະບັນຍັດຂອງພຣະຢາເວ[27]ແລະ ການງານຂອງພະອົງ ຕັ້ງແຕ່ຕົ້ນຈົນຈົບ
ກໍມີບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງອິສະຣາເອນ ແລະ ຢູດາ.

 generated on Tue Jun 17 19:01:42 2025

36 [1]ປະຊາຊົນແຫ່ງແຜ່ນດິນໄດ້ຕັ້ງເຢໂຮອາຮາດລູກຊາຍຂອງໂຢສີຢາ, ແລະ ໃຫ້ພະອົງເປັນກະສັດແທນບິດາຂອງພະອົງໃນເຢຣູຊາເລັມ.
[2]ເມື່ອເຢໂຮອາຮາດເລີ່ມປົກຄອງ ພະອົງມີອາຍຸຊາວສາມປີ, ແລະ ຊົງປົກຄອງໃນເຢຣູຊາເລັມສາມເດືອນ.

[3]ແລ້ວກະສັດແຫ່ງເອຢິບຊົງຖອດພະອົງໃນເຢຣູຊາເລັມ, ແລະ ກຳນົດໃຫ້ແຜ່ນດິນນັ້ນຖວາຍບັນນາການເປັນເງິນຫນຶ່ງຮ້ອຍຕະລັນຕົນ ແລະ
ຄຳຫນຶ່ງຕະລັນຕົນ.[4]ກະສັດແຫ່ງເອຢິບຕັ້ງໃຫ້ເອລີຢາກິມນ້ອງຊາຍຂອງພະອົງເປັນກະສັດເຫນືອຢູດາ ແລະ ເຢຣູຊາເລັມ, ແລະ
ຊົງປ່ຽນພະນາມຂອງພະອົງໃຫມ່ວ່າເຢໂຮຢາກິມ. ແລ້ວພະອົງກໍໄດ້ຊົງນຳອ້າຍຂອງເອລີຢາຄິມຄື ໂຢຮາດຜູ້ເປັນອ້າຍນຳໄປຍັງເອຢິບ.
[5]ເມື່ອເຢໂຮຢາກິມເລີ່ມປົກຄອງ ພະອົງມີອາຍຸຊາວຫ້າປີ ແລະ ຊົງປົກຄອງໃນເຢຣູຊາເລັມສິບເອັດປີ.
ພະອົງຊົງເຮັດຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວພຣະເຈົ້າຂອງພະອົງ.[6]ເນບູກາດເນັດຊາ, ກະສັດແຫ່ງບາບີໂລນ,
ໄດ້ສະເດັດຂຶ້ນມາຕໍ່ສູ້ກັບພະອົງ ແລະ ຈຳຈອງພະອົງດ້ວຍໂສ້ ເພື່ອພາພະອົງໄປຍັງບາບີໂລນ.
[7]ເນບູກາດເນັດຊາຊົງນຳເຄື່ອງໃຊ້ສ່ວນຫນຶ່ງໃນພຣະວິຫານຂອງພຣະຢາເວໄປນຳ, ແລະ ຊົງເກັບໄວ້ໃນວິຫານຂອງພະອົງໃນບາບີໂລນ.
[8]ສ່ວນພະຣາຊະກິດນອກນັ້ນຂອງເຢໂຮຢາກິມ, ແລະ ການຫນ້າກຽດຊັງຊຶ່ງພະອົງຊົງກະທຳ, ແລະ ໝົດການອື່ນທີ່ກ່ຽວກັບພະອົງ,
ກໍມີບັນທຶກໄວ້ໃນຫນັງສືຂອງກະສັດແຫ່ງອິສະຣາເອນ ແລະ ຢູດາ. ເຢໂຮຢາກິນລູກຊາຍຂອງພະອົງໄດ້ປົກຄອງແທນ.
[9]ເຢໂຮຢາກິນເລີ່ມປົກຄອງ ພະອົງມີອາຍຸສິບແປດປີ; ແລະ ຊົງປົກຄອງໃນເຢຣູຊາເລັມສາມເດືອນກັບສິບມື້.
ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວ.[10]ເມື່ອເຖິງສິ້ນປີແລ້ວ,
ກະສັດເນບູກາດເນັດຊາຊົງໃຊ້ໃຫ້ນຳພະອົງມາຍັງບາບີໂລນ, ພ້ອມກັບເຄື່ອງໃຊ້ປະເສີດແຫ່ງພຣະວິຫານຂອງພຣະຢາເວ, ແລະ
ຕັ້ງໃຫ້ເຊເດກີຢາບິດຸລາດ ລຸງຂອງພະອົງ, ເປັນກະສັດເຫນືອຢູດາ ແລະ ເຢຣູຊາເລັມ.
[11]ເມື່ອເຊເດກີຢາເລີ່ມປົກຄອງ ພະອົງມີອາຍຸຊາວເອັດປີ, ແລະ ຊົງປົກຄອງໃນເຢຣູຊາເລັມສິບເອັດປີ.
[12]ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງພຣະຢາເວພຣະເຈົ້າຂອງພະອົງ. ພະອົງບໍ່ໄດ້ຖ່ອມພະອົງລົງຕໍ່ຜູ້ທຳນວາຍເຢເຣມີຢາ
ຜູ້ກ່າວຈາກພຣະໂອດຂອງພຣະຢາເວ.
[13]ເຊເດກີຢາຊົງກະບົດເຊັ່ນກັນຕໍ່ກະສັດເນບູກາດເນັດຊາ, ຜູ້ທີ່ຊົງໃຫ້ພະອົງສາບານໃນພຣະນາມຊື່ຂອງພຣະເຈົ້າ. ພະອົງຊົງແຂງຂໍ້ຂອງພະອົງ
ເຮັດພະທັຍໃຫ້ແຂງກະດ້າງ ບໍ່ຫັນໄປຫາພຣະຢາເວ,ພຣະເຈົ້າແຫ່ງອິສະຣາເອນ.[14]ນອກຈາກນັ້ນ, ບັນດາປະໂລຫິດຜູ້ສຳຄັນ ແລະ
ປະຊາຊົນກໍເຊັ່ນດຽວກັນ ພວກເຂົາບໍ່ສັດຊື່, ແລະ ໂດຍຕິດຕາມບັນດາສິ່ງຫນ້າກຽດຊັງຂອງປະຊາຊາດ.
ພວກເຂົາເຮັດໃຫ້ພຣະວິຫານຂອງພຣະຢາເວໃນເຢຣູຊາເລັມ ຊຶ່ງພຣະອົງຊົງຊຳຣະໃຫ້ບໍຣິສຸດນັ້ນເປັນມົນທິນໄປ.
[15]ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຂົາ, ຊົງໃຊ້ໃຫ້ທູດສະຫວັນຂອງພຣະອົງມາຢ່າງບໍ່ຢຸດຢັ້ງ,
ເພາະພຣະອົງຊົງມີພຣະທັຍກະຣຸນາຕໍ່ປະຊາຊົນຂອງພຣະອົງ ແລະ
ຕໍ່ທີ່ປະທັບຂອງພຣະອົງ[16]ແຕ່ພວກເຂົາທັງຫລາຍເຢາະເຢີ້ຍທູດສະຫວັນຂອງພຣະເຈົ້າ, ຫມິ່ນປະຫມາດພຣະທັມຂອງພຣະອົງ, ແລະ
ທັງດ່າຜູ້ທຳນວາຍຂອງພຣະອົງ, ຈົນພຣະພິໂຣດຂອງພຣະຢາເວເກີດຂຶ້ນຕໍ່ປະຊາຊົນຂອງພຣະອົງແບບແກ້ບໍ່ໄຫວ.
[17]ພຣະອົງຈຶ່ງຊົງນຳກະສັດແຫ່ງຄົນຄັນເດອານມາຕໍ່ສູ້ພວກເຂົາທັງຫລາຍ, ຜູ້ຊຶ່ງຂ້າຊາຍຫນຸ່ມຂອງພວກເຂົາດ້ວຍດາບໃນ
ພຣະວິຫານອັນເປັນສະຖານທີ່ບໍຣິສຸດຂອງພວກເຂົາ, ແລະ ບໍ່ມີຄວາມກະຣຸນາແກ່ຊາຍຫນຸ່ມ, ຫລື ຍິງພົມມະຈາຣີ, ຄົນເຖົ້າຫລືຄົນຊະຣາ.
ພຣະອົງຊົງມອບທັງຫມົດໄວ້ໃນມືຂອງພວກເຂົາ.
[18]ເຄື່ອງໃຊ້ທັງຫມົດຂອງພຣະວິຫານຂອງພຣະເຈົ້າ, ທັງໃຫຍ່ແລະ ນ້ອຍ, ທັງຊັບສົມບັດແຫ່ງພຣະວິຫານຂອງພຣະຢາເວ,
ແລະຊັບສົມບັດແຫ່ງກະສັດ ແຫ່ງເຈົ້ານາຍຂອງພະອົງ ສິ່ງທັງຫມົດນີ້ພະອົງຊົງນຳມາບາບີໂລນ.[19]ພວກເຂົາເຜົາພຣະວິຫານຂອງພຣະເຈົ້າ,
ພວກເຂົາພັງກຳແພງເຢຣູຊາເລັມລົງ, ແລ້ວເອົາໄຟເຜົາວັງຂອງເມືອງນັ້ນຈົນຫມົດ, ແລະ ທັງທຳລາຍເຄື່ອງໃຊ້ປະເສີດທັງປວງໃນນັ້ນ.
[20]ກະສັດໄດ້ພາບັນດາຜູ້ທີ່ລອດພົ້ນຈາກດາບນັ້ນພະອົງຊົງໃຫ້ກວາດໄປເປັນຊະເລີຍໃນບາບີໂລນ.
ພວກເຂົາໄດ້ກາຍມາເປັນຜູ້ຮັບໃຊ້ຂອງພະອົງແກ່ຣາຊະວົງຂອງພະອົງ ຈົນຮອດການສະຖາປະນາຣາຊະອານາຈັກເປີເຊຍ.
[21]ສິ່ງໄດ້ເກີດຂຶ້ນເພື່ອໃຫ້ສຳເລັດຕາມພຣະທັມຂອງພຣະຜູ້ເປັນເຈົ້າທາງປາກຂອງເຢເຣມີຢາ,
ຈົນແຜ່ນດິນໄດ້ຊົມຊື່ນຍິນດີກັບປີສະບາໂຕຄົບຖ້ວນ. ເພາະທີ່ຖືກຖິ້ມຮ້າງຢູ່ນັ້ນ, ເພື່ອມັນໄດ້ຢຸດພັກສະຫງົບໃຫ້ສຳເລັດກຳນົດເຈັດສິບປີ.
[22]ບັດນີ້ໃນປີທຳອິດແຫ່ງຣາຊະການໄຊຣັດ, ກະສັດຂອງເປີເຊຍ, ເພື່ອພຣະທັມຂອງພຣະຢາເວ ທາງປາກຂອງ ເຢເຣມີຢາຈະສຳເລັດ,
ພຣະຢາເວຊົງປຸກຈິດໃຈຂອງໄຊຣັດ, ກະສັດຂອງເປີເຊຍ, ກະສັດຈຶ່ງຊົງມີປະກາດຕະຫລອດຣາຊະອານາຈັກຂອງພະອົງ ແລະ
ບັນທຶກເປັນລາຍລັກອັກສອນລົງດ້ວຍວ່າ,[23]" ໄຊຣັດ, ກະສັດແຫ່ງເປີເຊຍ, ກ່າວດັ່ງນີ້ວ່າ, 'ພຣະຢາເວ, ພຣະເຈົ້າຂອງຟ້າສະຫວັນ,
ໄດ້ພະຣາຊະທານບັນດາຣາຊະອານາຈັກແຫ່ງແຜ່ນດິນໂລກແກ່ເຮົາ. ພຣະອົງຊົງສັ່ງໃຫ້ເຮົາສ້າງພຣະວິຫານໃຫ້ພຣະອົງທີ່ເຢຣູຊາເລັມ,
ຊຶ່ງຢູ່ໃນຢູດາ. ມີຜູ້ໃດໃນທ່າມກາງທ່ານທັງຫລາຍທີ່ເປັນປະຊາຊົນຂອງພຣະອົງ, ຂໍພຣະຢາເວ, ພຣະເຈົ້າຂອງທ່ານສະຖິດກັບທ່ານ.
ຂໍໃຫ້ທ່ານກັບມາແຜ່ນດິນເຖີດ."

# ເອຊະຣາ

1 [1]ໃນປີທຳອິດຂອງໄຊຣັດ, ກະສັດແຫ່ງເປີເຊຍຂຶ້ນເປັນຈັກກະພັດ,
ພຣະຢາເວໄດ້ເຮັດໃຫ້ຖ້ອຍຄຳຂອງພຣະອົງອອກມາຈາກປາກເຢເຣມີຢາສຳເລັດ, ແລະ ໄດ້ຊົງເລົ້າໂລມຈິດໃຈຂອງໄຊຣັດ.
ສຽງຂອງໄຊຣັດໄດ້ປະກາດອອກທົ່ວອານາຈັກຂອງພະອົງ. ນີ້ເປັນສິ່ງທີ່ຊົງຂຽນໄວ້ ແລະ ໄດ້ກ່າວ:[2]" ໄຊຣັດ, ກະສັດແຫ່ງເປີເຊຍ, ກ່າວວ່າ:
ພຣະຢາເວ, ພຣະເຈົ້າແຫ່ງຟ້າສະຫວັນ, ໄດ້ໃຫ້ຂ້າພະເຈົ້າປົກຄອງອານາຈັກທັງຫມົດທົ່ວທັງແຜ່ນດິນໂລກ, ແລະ
ພຣະອົງຊົງໄດ້ແຕ່ງຕັ້ງໃຫ້ເຮົາສ້າງພຣະວິຫານແດ່ພຣະອົງໃນນະຄອນເຢຣູຊາເລັມໃນຢູດາຍ.

[3]ໃຜກໍຕາມທີ່ມາຈາກປະຊາກອນຂອງພຣະອົງ (ຂໍພຣະເຈົ້າຂອງເຂົາສະຖິດຢູ່ກັບເຂົາ) ຂໍໃຫ້ຂຶ້ນໄປຍັງນະຄອນເຢຣູຊາເລັມ ແລະ
ສ້າງພຣະວິຫານແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ພຣະເຈົ້າຜູ້ສະຖິດຢູ່ເມືອງເຢຣູຊາເລັມ.
[4]ປະຊາຊົນຂອງຣາຊະອານາຈັກທີ່ໃດກໍຕາມ ຊຶ່ງມີຜູ້ທີ່ເຫລືອຢູ່ຂອງແຜ່ນດິນນັ້ນອາສັຍຢູ່ ຄວນຈະໃຫ້ເງິນ ແລະ ທອງຄໍາ, ຊັບສິນ ແລະ
ສັດຕ່າງໆ, ພ້ອມກັບເຄື່ອງບູຊາດ້ວຍຄວາມສະຫມັກໃຈສໍາລັບພຣະວິຫານຂອງພຣະເຈົ້າໃນນະຄອນເຢຣູຊາເລັມ."
[5]ຈາກນັ້ນພວກຫົວຫນ້າຂອງຕະກຸນຂອງບັນພະບຸຣຸດຂອງຢູດາ ແລະ ເບັນຢາມິນ, ບັນດາປະໂລຫິດ ແລະ ຄົນເລວີ, ແລະ
ທຸກບ່ອນທີ່ພຣະເຈົ້າຊົງເລົ້າໂລມໃຈຂອງເຂົາໃຫ້ລຸກຂຶ້ນໄປ ແລະ ສ້າງພຣະວິຫານຂອງພຣະອົງ.
[6]ຄົນເຫລົ່ານັ້ນທີ່ຢູ່ໃກ້ຄຽງກັບພວກເຂົາກໍໄດ້ຊ່ວຍເຮັດວຽກພວກເຂົາດ້ວຍສິ່ງຂອງທີ່ເປັນເງິນ ແລະ ທອງຄໍາ, ຊັບສິນ, ສັດຕ່າງໆ, ຂອງມີຄ່າ,
ແລະ ເຄື່ອງບູຊາດ້ວຍຄວາມສະຫມັກໃຈ.
[7]ກະສັດໄຊຣັດຊົງນໍາສິ່ງຂອງທີ່ເປັນຂອງພຣະວິຫານຂອງພຣະຢາເວອອກມາ ທີ່ເນບູກາດເນັດຊາໄດ້ຊົງນໍາມາຈາກນະຄອນເຢຣູຊາເລັມ ແລະ
ຊົງນໍາໄປໄວ້ໃນວິຫານຂອງບັນດາພະເຈົ້າຂອງພະອົງເອງ.[8]ໄຊຣັດໄດ້ຊົງມອບສິ່ງເຫລົ່ານີ້ໃນການດູແລຂອງມິດເຣດາດຫົວຫນ້າຄັງ,
ຜູ້ທີ່ນັບສິ່ງຂອງເຫລົ່ານີ້ໃຫ້ແກ່ ເຊັດບັດຊາ, ຜູ້ປົກຄອງແຂວງຢູດາຍ.
[9]ນີ້ເປັນຈໍານວນຂອງສິ່ງຂອງເຫລົ່ານັ້ນ: ຄືອ່າງທອງຄໍາສາມສິບໃບ, ອ່າງເງິນຫນຶ່ງພັນໃບ, ອ່າງອື່ນໆອີກຊາວເກົ້າໃບ,[10]ຊາມທອງຄໍາສາມສິບໃບ,
ຊາມເງິນນ້ອຍ 410 ໃບ, ແລະພາຊະນະຢ່າງອື່ນອີກຫນຶ່ງພັນໃບ.[11]ມີສິ່ງຂອງທີ່ເປັນທອງຄໍາ ແລະ ລວມທັງຫມົດ 5,400ໃບ.
ເຊັດບັດຊາໄດ້ນໍາສິ່ງຂອງທັງຫມົດໄປ ເມື່ອພວກທີ່ເປັນຊະເລີຍໃນຕ່າງຖິ່ນອື່ນໆ ໄດ້ອອກຈາກບາບີໂລນກັບຄືນສູ່ນະຄອນເຢຣູຊາເລັມ.

 generated on Tue Jun 17 19:01:42 2025

2 [1]ເຫລົ່ານີ້ເປັນປະຊາຊົນໃນຕ່າງຖິ່ນຫລາຍຄົນໄດ້ກັບມາຈາກການເປັນຊະເລີຍຂອງເນບູກາດເນັດຊາ,
ຜູ້ທີ່ໄດ້ກວາດຕ້ອນພວກເຂົາໄປເປັນຊະເລີຍໃນບາບີໂລນ, ປະຊາຊົນເຫລົ່ານີ້ກໍໄດ້ກັບມາຍັງເມືອງຂອງພວກເຂົາໃນນະຄອນເຢຣູຊາເລັມ
ແລະ ໃນຢູດາຍ. ແຕ່ລະຄົນໄດ້ກັບສູ່ບ້ານເກີດເມືອງນອນຂອງໃຜລາວ.[2]ພວກເຂົາໄດ້ມາພ້ອມກັບເຊຣຸບບາເບນ, ເຢຊູອາ, ເນເຫມີຢາ,
ເສຣາອີຢາ, ເຣເອຣາອີຢາ, ມໍເດໄກ, ບິນຊານ, ມີຊະປາ, ບິກໄວ, ເຣຫູມ, ແລະ ບາອານາ.
ນີ້ເປັນບັນທຶກຂອງຄົນເຫລົ່ານັ້ນຂອງປະຊາຊົນອິສະຣາເອນ.

[3]ເຊື້ອສາຍຂອງປາຣົດ: 2,172 ຄົນ.[4]ເຊື້ອສາຍຂອງເຊຟາຕີຢາ: 372 ຄົນ.[5]ເຊື້ອສາຍຂອງອາຣາ: 775 ຄົນ.[6]ເຊື້ອສາຍ ປາຮາດ, ໂມອາບ
ຜ່ານທາງເຊື້ອສາຍຂອງເຢຊູອາ ແລະ ໂຢອາບ: 2,812 ຄົນ.
[7]ເຊື້ອສາຍຂອງເອລາມ: 1,254 ຄົນ.[8]ເຊື້ອສາຍຂອງຊັດຕູ: 945 ຄົນ.[9]ເຊື້ອສາຍຂອງຊັກກາຍ: 760 ຄົນ.[10]ເຊື້ອສາຍຂອງບານີ: 642 ຄົນ.
[11]ເຊື້ອສາຍຂອງເບບາຍ: 623 ຄົນ.[12]ເຊື້ອສາຍຂອງອາຊະກາດ: 1,222 ຄົນ.[13]ເຊື້ອສາຍຂອງອາໂດນີ: 666 ຄົນ.[14]ເຊື້ອສາຍຂອງບິກໄວ:
2,056 ຄົນ.
[15]ເຊື້ອສາຍຂອງອາດິນ: 454 ຄົນ.[16]ເຊື້ອສາຍຂອງຊາວອາເຕ, ໂດຍທາງເຮເຊກີຢາ: 98 ຄົນ.[17]ເຊື້ອສາຍຂອງເບໄຊ: 323 ຄົນ.
[18]ເຊື້ອສາຍຂອງໂຢຣາ: 112 ຄົນ.
[19]ຊາວຮາຊູມ: 223 ຄົນ.[20]ຊາວ ກິບບາ: 95 ຄົນ.[21]ຊາວເບັດເລເຮັມ: 123 ຄົນ.[22]ຊາວເນໂຕຟາ: 56 ຄົນ.
[23]ຊາວອານາທົດ: 128 ຄົນ.[24]ຊາວ ອາຊະມາເວດ: 42 ຄົນ.[25]ຊາວກີຣິອາດ, ເຢອາຣິມ, ເກຟີຣາ, ແລະ ເບເອໂຣດ: 743 ຄົນ.[26]ຊາວຣາມາ
ແລະ ເກບາ: 621 ຄົນ.
[27]ຊາວມິກມາດ: 122 ຄົນ.[28]ຊາວ ເບັດເອນ ແລະ ອາອີ: 223 ຄົນ.[29]ຊາວ ເນໂບ: 52 ຄົນ.[30]ຊາວມັກບິດ: 156 ຄົນ.
[31]ຊາວເອລາມພວກອື່ນ: 1,254 ຄົນ.[32]ຊາວຮາຣິມ: 320 ຄົນ.[33]ຊາວໂລດ, ຮາດິດ, ແລະ ໂອໂນ: 725 ຄົນ.
[34]ຊາວເຢຣີໂກ: 345 ຄົນ.[35]ຊາວ ເສນາຢາ: 3,630 ຄົນ.
[36]ຕໍ່ໄປນີ້ແມ່ນບັນຊີລາຍຊື່ຂອງຕະກຸນຂອງປະໂລຫິດ ທີ່ໄດ້ກັບຄືນມາຈາກການເປັນຊະເລີຍໃນຕ່າງຖິ່ນມີດັ່ງນີ້ ເຊື້ອສາຍຂອງເຢດາ ອີຢາຊູອາ:
973 ຄົນ.[37]ເຊື້ອສາຍຂອງອິມເມ: 1,052 ຄົນ.[38]ເຊື້ອສາຍປັດຊູ: 1,247 ຄົນ.[39]ເຊື້ອສາຍຮາຣິມ: 1,017 ຄົນ.
[40]ຕະກຸນຕ່າງໆຂອງຊາວເລວີ ທີ່ໄດ້ກັບມາຈາກການເປັນຊະເລີຍໃນຕ່າງຖິ່ນມີດັ່ງນີ້ຄືເຊື້ອສາຍເຢຊູອາ ແລະ ກາດມີເເນວ,
ເຊື້ອສາຍຂອງໂຮດາວີຢາ: 74 ຄົນ.[41]ນັກດົນຕຣີປະຈຳພຣະວິຫານ, ເຊື້ອສາຍຂອງອາສັບ: 128 ຄົນ.
[42]ເຊື້ອສາຍຄົນເຝົ້າຍາມປະຈຳພຣະວິຫານ: ເຊື້ອສາຍຂອງຊັນລູມ, ອາເຕ, ຕານໂມນ, ອັກກຸບ, ຮາຕີຕາ ແລະ ໂຊໄບ: 139 ຄົນ.
[43]ຄົນເຫລົ່ານັ້ນໄດ້ຮັບຫນ້າທີ່ໃນການບົວລະບັດໃນພຣະວິຫານ: ເຊື້ອສາຍຂອງຊີຮາ, ຮາຊູຟາ, ຕັບບາອົດ,[44]ເຄໂຣດ, ສີອາຮາ, ປາໂດນ,
[45]ເລບານາ, ຮາກາບາ, ອັກກຸບ,[46]ຮາກາບ, ຊານໄມ, ແລະ ຮານານ.
[47]ເຊື້ອສາຍຂອງກິດເດນ: ແມ່ນກາຮາ, ເຣອາຢາ,[48]ເຣຊິນ, ເນໂກດາ, ກັດຊໍາ,[49]ອຸດຊາ, ປາເສອາ, ເບສາຍ,[50]ອາສະນາ, ເມອູນິມ, ແລະ
ເນຟີສິມ.
[51]ເຊື້ອສາຍຂອງບັກບຸກ: ຮາກູຟາ, ຮາກຮູ,[52]ບາຊະລຸດ, ເມຮີດາ, ຮາກຊາ,[53]ບາໂກ, ສີເສຣາ, ເຕມາ,[54]ເນຊີຢາ, ແລະ ຮາຕີຟາ.
[55]ເຊື້ອສາຍຂອງຜູ້ຮັບໃຊ້ຂອງໂຊໂລໂມນຄື: ເຊື້ອສາຍຂອງໂສໄຕ, ຮາໂສເຟເຣັດ, ເປຣູດາ,[56]ຢາອາລາ, ດາກໂກນ, ກິດເດນ,[57]ເຊຟາຕີຢາ,
ຮັດຕິນ, ໂປເກເຣັດຮັດເຊບາອິມ, ແລະ ອາມີ.[58]ຈຳນວນເຊື້ອສາຍທັງຫມົດຂອງຄົນເຮັດວຽກໃນພຣະວິຫານທັງຫມົດ 392 ຄົນ ແລະ
ເຊື້ອສາຍຂອງຜູ້ຮັບໃຊ້ຂອງໂຊໂລໂມນ.
[59]ຄົນເຫລົ່ານັ້ນທີ່ມາຈາກເມືອງເທນເມລາ, ເທນຮາກຊາ, ເຄຣຸບ, ອັດດານ, ແລະ ອິມເມ - ແຕ່ພວກເຂົາພິສູດບໍ່ໄດ້ວ່າ
ພວກຕົນສືບເຊື້ອສາຍຈາກອິສະຣາເອນ[60]- ລວມມີເຊື້ອສາຍຂອງເດລາອີຢາ, ໂຕບີຢາ, ແລະ ເນໂກດາລວມ 652 ຄົນ.
[61]ຍິ່ງກວ່ານັ້ນຈາກເຊື້ອສາຍຂອງປະໂລຫິດຄື: ເຊື້ອສາຍຂອງໂຮບາອີຢາ, ຮັກກົດ, ແລະ ບາກຊິນໄລ
(ຜູ້ທີ່ໄດ້ເມຍຂອງເຂົາຈາກບັນດາລູກສາວຂອງບາກຊິນໄລ ຊາວກີເລອາດ ແລະ ໄດ້ເອີ້ນຊື່ຂອງພວກເຂົາ).
[62]ພວກເຂົາໄດ້ຄົ້ນຫາບັນທຶກຂອງລໍາດັບເຊື້ອສາຍຂອງພວກເຂົາ, ແຕ່ກໍບໍ່ພົບລາຍຊື່ເຫລົ່ານັ້ນ,
ດັ່ງນັ້ນພວກເຂົາຈຶ່ງໄດ້ຖືກຕັດອອກຈາກການເປັນປະໂລຫິດເພາະເປັນມົນທິນ.[63]ດັ່ງນັ້ນ
ຜູ້ວ່າການເມືອງຈຶ່ງໄດ້ບອກພວກເຂົາວ່າພວກເຂົາຕ້ອງບໍ່ກິນເຄື່ອງບູຊາບໍຣິສຸດໃດໆ ຈົນກວ່າປະໂລຫິດຈະພິສູດດ້ວຍອຸຣິມ ແລະ
ທຸມມີມເສຍກ່ອນ.
[64]ຄົນກຸ່ມນີ້ລວມທັງຫມົດ 42,360 ຄົນ,[65]ບໍ່ລວມພວກຜູ້ຮັບໃຊ້ຊາຍ ແລະ ພວກຮັບໃຊ້ຍິງຂອງພວກເຂົາ (ຄົນເຫລົ່ານີ້ມີຢູ່ 7,337 ຄົນ) ແລະ
ນັກຮ້ອງປະຈຳພຣະວິຫານຊາຍ ແລະ ຍິງຂອງພວກເຂົາ (ສອງຮ້ອຍຄົນ).
[66]ມ້າຂອງພວກເຂົາ: 736 ໂຕ. ລໍຂອງພວກເຂົາ: 245 ໂຕ.[67]ອູດຂອງພວກເຂົາ: 435 ໂຕ. ລາຂອງພວກເຂົາ: 6,720 ໂຕ.
[68]ເມື່ອເຂົາໄດ້ໄປເຖິງພຣະວິຫານພຣະຢາເວໃນນະຄອນເຢຣູຊາເລັມ,
ພວກຫົວຫນ້າຂອງຄອບຄົວກໍໄດ້ຖວາຍຂອງຖວາຍດ້ວຍຄວາມສະຫມັກໃຈເພື່ອສ້າງພຣະວິຫານ.
[69]ພວກເຂົາໄດ້ຖວາຍຕາມກຳລັງຂອງພວກເຂົາ ໃຫ້ເປັນກອງທຶນເພື່ອງານນີ້ໃຫ້ເປັນ: ທອງຄຳຫົກຫມື່ນຫນຶ່ງພັນດາຣິດ, ເງິນຫ້າພັນມີນາ, ແລະ
ຊຸດປະໂລຫິດຫນຶ່ງຮ້ອຍຊຸດ.
[70]ດັ່ງນັ້ນບັນດາຄົນປະໂລຫິດ ແລະ ຄົນເລວີ, ພວກນັກຮ້ອງປະຈຳພຣະວິຫານ ແລະ ພວກຄົນເຝົ້າປະຕູ, ແລະ
ພວກຄົນທີ່ໄດ້ຮັບມອບຫມາຍໃຫ້ປະຕິບັດພຣະວິຫານກໍອາສັຍຢູ່ໃນເມືອງຂອງພວກເຂົາ.
ປະຊາຊົນໃນອິສະຣາເອນຕ່າງກໍອາສັຍຢູ່ໃນເມືອງຂອງພວກເຂົາ.

3 [1]ໃນເດືອນທີເຈັດຫລັງຈາກປະຊາຊົນອິສະຣາເອນໄດ້ກັບມາຍັງບ້ານເມືອງຂອງພວກເຂົາ,
ເມື່ອເຂົາມາຊຸມນຸມພ້ອມກັນໃນນະຄອນເຢຣູຊາເລັມ.[2]ເຢຊູອາລູກຊາຍຂອງໂຢຊາດັກ ແລະ ພີ່ນ້ອງຂອງປະໂລຫິດຂອງເຂົາ,
ແລະເຊຣຸບບາເບນ ລູກຊາຍຂອງເຊອານຕີເອນ, ແລະພີ່ນ້ອງຂອງເຂົາໄດ້ລຸກຂຶ້ນໄປ ແລະ ໄດ້ສ້າງແທ່ນບູຊາຂອງພຣະເຈົ້າແຫ່ງອິດສະຣາເອນ
ເພື່ອຖວາຍເຄື່ອງບູຊາຕາມທີ່ໄດ້ຊົງສັ່ງໄວ້ໃນພຣະທັມບັນຍັດຂອງໂມເຊ, ຄົນຂອງພຣະເຈົ້າ.

[3]ແລ້ວພວກເຂົາໄດ້ຕັ້ງແທ່ນບູຊາໄວ້ເທິງຖານຂອງມັນ, ເພາະພວກເຂົາຕົກຢູ່ໃນຄວາມຢ້ານ ເນື່ອງຈາກປະຊາຊົນໃນແຜ່ນດິນນັ້ນ.
ພວກເຂົາໄດ້ຖວາຍເຄື່ອງບູຊາແດ່ພຣະຢາເວໃນຕອນເຊົ້າ ແລະ ຕອນແລງ.[4]ພວກເຂົາໄດ້ຖືເທສະການໄຟ ຕາມທີ່ມີຂຽນບັນທຶກໄວ້
ແລະຖວາຍເຄື່ອງເຜົາບູຊາໃນມື້ຕໍ່ມື້ຕາມພຣະບັນຍັດ, ຕາມວັນທີ່ໄດ້ກຳນົດໄວ້ໃນແຕ່ລະວັນ.[5]ຊຶ່ງມີດັ່ງຕໍ່ໄປນີ້, ເຄື່ອງເຜົາບູຊາປະຈຳວັນ ແລະ
ເດືອນລະຄັ້ງ ແລະ ເຄື່ອງບູຊາສຳລັບເທສະການງານລ້ຽງຕາມກຳນົດທັງຫມົດຂອງພຣະຢາເວ,
ພ້ອມກັບເຄື່ອງບູຊາດ້ວຍຄວາມສະຫມັກໃຈທັງຫມົດ.
[6]ພວກເຂົາເລີ່ມຖວາຍເຄື່ອງບູຊາ ແດ່ພຣະຢາເວໃນວັນທີຫນຶ່ງເດືອນທີເຈັດ, ເຖິງແມ່ນວ່າຈະບໍ່ໄດ້ວາງຮາກຖານຂອງພຣະວິຫານ.[7]ດ້ວຍເຫດນີ້
ພວກເຂົາຈຶ່ງໄດ້ໃຫ້ເງິນແກ່ຊ່າງສະກັດຫີນ ແລະ ຊ່າງຝີມື, ແລະ ພວກເຂົາໄດ້ໃຫ້ອາຫານ, ເຄື່ອງດື່ມ, ແລະ
ນ້ຳມັນຫມາກກອກເທດແກ່ຄົນໄຊດອນ ແລະ ຄົນໄທຣະ, ເພື່ອໃຫ້ພວກເຂົາໄດ້ນຳຕົ້ນສົນສີດາມາຈາກເລບານອນມາຍັງເມືອງຢົບປາທາງທະເລ,
ຕາມທີ່ພວກເຂົາໄດ້ຮັບອະນຸຍາດຈາກໄຊຣັສ, ກະສັດແຫ່ງເປີເຊຍ.
[8]ຈາກນັ້ນໃນເດືອນທີສອງປີທີສອງ ຫລັງຈາກເຂົາໄດ້ມາຍັງພຣະວິຫານຂອງພຣະເຈົ້າໃນນະຄອນເຢຣູຊາເລັມ, ເຊຣຸບບາເບນ,
ເຢຊູອາລູກຊາຍຂອງໂຢຊາດັກ, ພວກປະໂລຫິດຄົນອື່ນໆ, ຄົນເລວີ, ແລະ
ພວກຄົນທີ່ກັບມາຈາກການເປັນຊະເລີຍມາຍັງນະຄອນເຢຣຸຊາເລັມກໍໄດ້ເລີ່ມງານ. ພວກເຂົາໄດ້ມອບຫມາຍໃຫ້ຄົນເລວີ
ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ໃຫ້ເບິ່ງງານກ່ຽວກັບພຣະວິຫານຂອງພຣະຢາເວ.[9]ເຢຊູອາໄດ້ຕັ້ງພວກລູກຊາຍຂອງເຂົາ ແລະ ພີ່ນ້ອງຂອງເຂົາ,
ແລະກາດມີເອນ ພ້ອມກັບພວກລູກຊາຍຂອງຕົນ, ແລະ ເຊື້ອສາຍຂອງຢູດາ ເບິ່ງແຍງປະຊາຊົນໃຫ້ເຮັດວຽກຕາມພຣະວິຫານຂອງພຣະເຈົ້າ.
ຄືເຊື້ອສາຍຕະກຸນເຮນາດາດ, ເຊື້ອສາຍຂອງພວກເຂົາເອງ, ແລະ ພວກພີ່ນ້ອງທີ່ເປັນຄົນເລວີດ້ວຍກັນທີ່ໄດ້ເຮັດວຽກຮ່ວມກັບພວກເຂົາ.
[10]ຊ່າງກໍ່ສ້າງໄດ້ວາງຮາກຖານໄວ້ສຳລັບພຣະວິຫານຂອງພຣະຢາເວ. ສິ່ງນີ້ເຮັດໃຫ້ພວກປະໂລຫິດໄດ້ແຕ່ງເຄື່ອງຍົດພວກເຂົາ
ເພື່ອຢືນພ້ອມກັບຖືແກ, ແລະ ຄົນເລວີ, ທີ່ເປັນລູກຊາຍຂອງອາຊັບ, ສັນຣະເສີນພຣະຢາເວຕາມຄຳແນະນຳ
ຄືກັນກັບດາວິດກະສັດແຫ່ງອິສະຣາເອນໄດ້ຊົງສັ່ງໄວ້.[11]ພວກເຂົາໄດ້ຮ້ອງເພງດ້ວຍການສັນຣະເສີນ ແລະ ຂອບພຣະຄຸນແດ່ພຣະຢາເວ,
"ພຣະອົງຊົງປະເສີດ! ພັນທະສັນຍາອັນສັດຊື່ຂອງພຣະອົງຕໍ່ອິສະຣາເອນດຳຣົງເປັນນິດ." ປະຊາຊົນທັງປວງກໍໄດ້ໂຮ່ຮ້ອງສັນຣະເສີນພຣະຢາເວ
ດ້ວຍສຽງດັງດ້ວຍຄວາມຍິນດີ ເພາະຮາກຖານຂອງພຣະວິຫານໄດ້ວາງລົງແລ້ວ.
[12]ແຕ່ມີຫລາຍຄົນທີ່ເປັນປະໂລຫິດ, ຄົນເລວີ, ພວກຫົວຫນ້າຕະກຸນ, ແລະ ພວກຄົນເຖົ້າທີ່ໄດ້ເຫັນພຣະວິຫານຫລັງທຳອິດ,
ເມື່ອຮາກຖານຂອງພຣະວິຫານແຫ່ງນີ້ ໄດ້ວາງຕໍ່ຫນ້າຕໍ່ຕາຂອງພວກເຂົາ, ກໍຮ້ອງໄຫ້ສຽງດັງ. ແຕ່ຫລາຍຄົນກໍຮ້ອງດ້ວຍຍິນດີ ແລະ
ດ້ວຍຄວາມຊື່ນບານ ແລະດ້ວຍສຽງທີ່ຕື່ນເຕັ້ນ.[13]ດ້ວຍເຫດຜົນນີ້, ປະຊາຊົນຈຶ່ງແຍກບໍ່ອອກລະຫວ່າງສຽງແຫ່ງຄວາມຊື່ນຊົມຍິນດີ ແລະ
ສຽງຂອງຄວາມສຸກ ຈາກສຽງຂອງປະຊາຊົນທີ່ກຳລັງຮ້ອງໄຫ້ນ້ຳຕາໄຫລ,
ເພາະປະຊາຊົນກຳລັງຮ້ອງໄຫ້ອອກມາດ້ວຍຄວາມຊື່ນຊົມຍິນດີຢ່າງຍິ່ງ, ແລະ ສຽງນັ້ນກໍໄດ້ຍິນມາຈາກທີ່ໄກ.


generated on Tue Jun 17 19:01:42 2025

# 4

[1]ໃນຂະນະນີ້ພວກສັດຕຣູຂອງຢູດາ ແລະເບັນຢາມິນໄດ້ຍິນວ່າປະຊາຊົນ
ຜູ້ທີ່ເຄີຍຖືກກວາດຕ້ອນໄປເປັນຊະເລີຍທີ່ກຳລັງສ້າງພຣະວິຫານແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນຢູ່ຕອນນີ້.
[2]ດັ່ງນັ້ນເຂົາຈຶ່ງໄດ້ເຂົ້າມາຫາເຊຣຸບບາເບນ ແລະ ພວກຫົວໜ້າຕະກຸນບັນພະບຸຣຸດຂອງພວກເຂົາ. ຄົນເຫລົ່ານັ້ນໄດ້ເວົ້າກັບພວກເຂົາວ່າ,
"ໃຫ້ເຮົາສ້າງດ້ວຍກັນກັບພວກທ່ານ, ແລະ ໄດ້ຖວາຍເຄື່ອງບູຊາແດ່ພຣະອົງ, ຕັ້ງແຕ່ມື້ທີ່ເອສາຮັດໂດນ, ກະສັດແຫ່ງອັດຊີເຣຍ,
ໄດ້ນຳພວກເຮົາມາຍັງສະຖານທີ່ແຫ່ງນີ້."

[3]ແຕ່ເຊຣຸບບາເບນ, ເຢຊູອາ, ແລະ ພວກຫົວໜ້າຂອງຕະກູນຂອງບັນພະບຸຣຸດຂອງພວກເຂົາໄດ້ກ່າວວ່າ, "ບໍ່ແມ່ນພວກທ່ານ,
ແຕ່ພວກເຮົາເປັນຜູ້ທີ່ຕ້ອງສ້າງພຣະວິຫານແດ່ພຣະເຈົ້າຂອງເຮົາ, ເພາະເປັນພວກເຮົານີ້ແຫລະ ທີ່ຈະສ້າງແດ່ພຣະຢາເວ,
ພຣະເຈົ້າແຫ່ງອິສະຣາເອນ, ຕາມທີ່ກະສັດໄຊຣັສກະສັດແຫ່ງເປີເຊຍໄດ້ຊົງບັນຊາໄວ້."
[4]ດ້ວຍເຫດນີ້ປະຊາຊົນຂອງແຜ່ນດິນນັ້ນ ກໍເຮັດໃຫ້ມືຂອງຄົນຢູດາຍອ່ອນກຳລັງລົງ; ພວກເຂົາເຮັດໃຫ້ຄົນຢູດາຍຢ້ານທີ່ຈະສ້າງ.
[5]ພວກເຂົາໃຫ້ຕິດສິນບົນທີ່ປຶກສາເພື່ອຂັດຂວາງແຜນງານຂອງພວກເຂົາດ້ວຍ.
ພວກເຂົາໄດ້ເຮັດແນວນີ້ຕະຫລອດຣາຊການຂອງໄຊຣັສແຫ່ງເປີເຊຍ.[6]ຈົນເຖິງຕົ້ນຣາຊການຂອງກະສັດເຊເຊັດ
ເຫລົ່າສັດຕຣູຂອງປະຊາຊົນຢູດາຍ ແລະ ເຢຣູຊາເລັມ ໄດ້ນຳຂໍ້ກ່າວຫາຂຽນເປັນລາຍລັກອັກສອນ.
[7]ໃນຣາຊການກະສັດອາຫາສຸເອຣັດ, ທີບີຊະລາມ, ມິດເຣດາດ, ຕາເບເອນ, ແລະ ຜູ້ຮ່ວມງານຂອງພວກເຂົາໄດ້ຂຽນຈົດໝາຍຫາກະສັດອາ
ຫາສຸເອຣັດ. ຈົດໝາຍນັ້ນໄດ້ຂຽນເປັນພາສາອາຣາມິກ ແລະ ກໍໄດ້ຖືກແປ.[8]ເຊັ່ນດຽວກັນກັບເຣຮູມຜູ້ປົກຄອງແຂວງ ແລະ
ຊິມໄຊເລຂາທິການປະຈຳແຂວງກໍໄດ້ຂຽນຈົດໝາຍນີ້ຫາກະສັດ ອາກຕາເຊເຊັດ ກ່ຽວກັບນະຄອນເຢຣູຊາເລັມໃນລັກສະນະນີ້.
[9]ແລ້ວເຣຮູມ, ຊິມໄຊ, ແລະ ໝູ່ຄະນະຂອງພວກເຂົາ, ຜູ້ທີ່ປົກຄອງ ແລະ ຂ້າຣາຊການຄົນອື່ນໆທັງໝົດທີ່ມາຈາກຣັຖະບານ, ຈາກເອເຣັກ,
ບາບີໂລນ ແລະ ຊູຊາດິນແດນເອລາມ - ພວກເຂົາໄດ້ຂຽນຈົດໝາຍສະບັບໜຶ່ງ -[10]ແລະ ພວກເຂົາໄດ້ຮ່ວມມືກັບພວກເຈົ້ານາຍໃຫຍ່ ແລະ
ພວກຂຸນນາງ ອາຊູບານີປານຜູ້ຍິ່ງໃຫຍ່ ໄດ້ບັງຄັບເຂົ້າມາຕັ້ງຖິ່ນຖານໃນສະມາເຣຍ, ພ້ອມກັບຄົນທີ່ເຫລືອໃນແຂວງທາງຟາກຕາເວັນຕົກ
ຂອງແມ່ນ້ຳເອີຟຣັດ."
[11]ນີ້ເປັນສຳເນົາຂອງຈົດໝາຍທີ່ເຂົາໄດ້ສົ່ງໄປເຖິງອາກຕາເຊເຊັດວ່າ: "ບັນດາຂ້າຣາຊການຂອງພະອົງ, ປະຊາຊົນຂອງແຂວງ,
ກາຍຟາກແມ່ນ້ຳນັ້ນ, ຂຽນດັ່ງນີ້ວ່າ:[12]ຂໍກະສັດຊົງຮູ້ວ່າ ພວກຢິວຜູ້ມາຈາກພະອົງໄດ້ມາຕໍ່ຕ້ານພວກເຮົາ ໃນເຢຣູຊາເລັມທີ່ຈະສ້າງເມືອງກະບົດ.
ພວກເຂົາໄດ້ສ້າງກຳແພງເຫລົ່ານັ້ນສຳເລັດ ແລະ ໄດ້ສ້ອມແຊມຮາກຖານແລ້ວ.
[13]ບັດນີ້ກະສັດຊົງຮູ້ວ່າຖ້າເມືອງນີ້ໄດ້ສ້າງຂຶ້ນ ແລະ ກຳແພງກໍໄດ້ສ້າງສຳເລັດແລ້ວ, ພວກເຂົາຈະບໍ່ໃຫ້ເຄື່ອງບັນນາການ ແລະ
ສ່ວຍສາອາກອນຈັກຢ່າງເລີຍ, ແຕ່ພວກເຂົາຈະເຮັດຄວາມເສຍຫາຍໃຫ້ແກ່ບັນດາກະສັດ.
[14]ເພາະເປັນທີ່ແນ່ນອນວ່າພວກຂ້ານ້ອຍໄດ້ກິນເກືອຂອງຣາຊະວັງ, ຈຶ່ງບໍ່ເໝາະສົມທີ່ພວກພະອົງຈະເບິ່ງການບໍ່ໃຫ້ກຽຕໃດໆ
ເກີດຂຶ້ນຕໍ່ກະສັດໄດ້. ດ້ວຍເຫດນີ້ພວກຂ້າພະອົງຈຶ່ງກ່າວໃຫ້ພະອົງຊົງຮູ້.[15]ເພື່ອພະອົງຈະຊົງຄົ້ນຫາບັນທຶກຂອງບິດາຂອງພະອົງ ແລະ
ກວດສອບວ່ານີ້ເປັນເມືອງກະບົດທີ່ຈະເຮັດໃຫ້ບັນດາກະສັດ ແລະ ແຂວງຕ່າງໆເສຍຫາຍ.
ຊຶ່ງຈະເຮັດໃຫ້ເກີດບັນຫາຢ່າງຫລວງຫລາຍຕໍ່ບັນດາກະສັດ ແລະ ແຂວງຕ່າງໆ. ນີ້ເປັນສູນກາງຂອງການກະບົດມາດົນນານແລ້ວ.
ຊຶ່ງເປັນເພາະເຫດຜົນນີ້ເອງ ເມືອງນີ້ຈຶ່ງຖືກທຳລາຍ.[16]ພວກຂ້ານ້ອຍໄດ້ແຈ້ງໃຫ້ກະສັດຊົງຮູ້ວ່າ ຖ້າເມືອງນີ້ ແລະ ກຳແພງໄດ້ສ້າງແລ້ວ,
ກໍຈະບໍ່ເຫລືອຫຍັງສຳລັບພະອົງເລີຍ ໃນອີກຟາກຂອງແມ່ນ້ຳນັ້ນ."
[17]ດັ່ງນັ້ນກະສັດ ຈົດໝາຍຕອບເຣຮູມ ແລະ ຊິມໄຊ ແລະ ຜູ້ຮ່ວມງານໃນສະມາເຣຍ ເລະຄົນທີ່ເຫລືອຢູ່ຟາກແມ່ນ້ຳວ່າ:
"ຂໍສັນຕິສຸກດຳຣົງຢູ່ກັບພວກທ່ານເຖີດ.[18]ຈົດໝາຍທີ່ພວກທ່ານໄດ້ສົ່ງມາຍັງເຮົາໄດ້ຖືກແປ ແລະ ອ່ານໃຫ້ເຮົາຟັງແລ້ວ.[19]ດັ່ງນັ້ນ
ເຮົາຈຶ່ງໄດ້ສັ່ງໃຫ້ສອບສວນ ແລະ ໄດ້ພົບວ່າແຕ່ກ່ອນພວກເຂົາໄດ້ກະບົດ ແລະ ທໍຣະຍົດຕໍ່ກະສັດທັງຫລາຍ.
[20]ກະສັດຜູ້ມີອຳນາດປົກຄອງເໜືອເຢຣູຊາເລັມ ແລະ ມີອຳນາດເໜືອທຸກສິ່ງ ທີ່ຢູ່ຟາກໜຶ່ງຂອງແມ່ນ້ຳນັ້ນ. ໃຊ້ອິດທິພົນເກັບພາສີ ແລະ
ຫາລາຍໄດ້.[21]ບັດນີ້, ຈົ່ງອອກຄຳສັ່ງໃຫ້ຄົນເຫລົ່ານັ້ນຢຸດສ້າງເມືອງນີ້ ຈົນກວ່າຂ້າພະເຈົ້າຈະໃຫ້ຄຳສັ່ງໃໝ່ອີກ.[22]ຈົ່ງລະເລີຍເລື່ອງນີ້.
ເປັນຫຍັງຈຶ່ງປ່ອຍໃຫ້ມີການຄຸກຄາມເຊັ່ນນີ້ຂຶ້ນ ແລະ ເຮັດໃຫ້ເກີດຄວາມສູນເສຍຜົນປະໂຫຍດເລື່ອງນີ້ຕໍ່ໄປ?
[23]ເມື່ອຈົດໝາຍຂອງກະສັດອາກຕາເຊເຊັດຖືກອ່ານສູ່ເຣຮູມ, ຊິມໄຊ, ແລະ ເພື່ອນຮ່ວມງານຂອງພວກເຂົາ,
ພວກເຂົາກໍໄດ້ຮີບອອກໄປເຢຣູຊາເລັມ ແລະ ໄດ້ບັງຄັບໃຫ້ພວກຢິວຢຸດສ້າງ.[24]ດັ່ງນັ້ນ
ການສ້າງພຣະວິຫານໃນເຢຣູຊາເລັມຈຶ່ງຢຸດລົງເຖິງປີທີສອງຂອງຣາຊການດາຣິອຸດແຫ່ງເປີເຊຍ.


generated on Tue Jun 17 19:01:42 2025

5 [1]ແລ້ວຮັກກາຍຜູ້ທຳນວາຍ ແລະ ເຊກາຣີຢາລູກຊາຍຂອງອິດໂດ ຜູ້ເຜີຍພຣະວັຈະນະ
ໄດ້ເຜີຍພຣະວັຈະນະໃນພຣະນາມຊື່ຂອງພຣະເຈົ້າແຫ່ງອິສະຣາເອນຕໍ່ພວກຢິວໃນຢູດາຍ ແລະເຢຣູຊາເລັມ.
[2]ເຊຣຸບບາເບນລູກຊາຍຂອງເຊອານຕີເອນ ແລະ ເຢຊູອາລູກຊາຍຂອງໂຢຊາດັກກໍໄດ້ລຸກຂຶ້ນ ແລະ
ໄດ້ເລີ່ມສ້າງພຣະນິເວດຂອງພຣະເຈົ້າໃນເຢຣູຊາເລັມກັບພວກຜູ້ເຜີຍພະວັຈະນະທີ່ຄອຍຫນູນໃຈພວກເຂົາ.

[3]ພໍດີໃນເວລາດຽວກັນນັ້ນ ຕັດເຕໄນ ຜູ້ປົກຄອງພາກຕາເວັນຕົກ ທີ່ຢູ່ອີກຟາກແມ່ນ້ຳ, ເຊຕາກໂບເຊໄນ, ແລະ ຜູ້ຮ່ວມງານໄດ້ມາ ແລະ
ໄດ້ຖາມພວກເຂົາວ່າ, "ແມ່ນຜູ້ໃດທີ່ສັ່ງໃຫ້ເຈົ້າກໍ່ສ້າງພຣະວິຫານຫລັງນີ້ ແລະ ກຳແພງເຫລົ່ານີ້ຈົນແລ້ວ?[4]ແລ້ວພວກເຂົາກໍຍັງຖາມອີກວ່າ
"ພວກຄົນສ້າງອາຄານຫລັງນີ້ມີຊື່ໃຜແນ່?"[5]ແຕ່ພຣະເນດຂອງພຣະເຈົ້າຢູ່ເຫນືອພວກຜູ້ອາວຸໂສຊາວຢິວ ແລະ
ສັດຕຣູຂອງພວກເຂົາບໍ່ໄດ້ເຮັດສິ່ງໃດ.
ພວກເຂົາກໍຍັງຄອຍຈົດຫມາຍທີ່ໄດ້ສົ່ງໄປຍັງກະສັດພວກເຂົາຈະບໍ່ເຮັດສິ່ງໃດຈົນກວ່າກະສັດຈະຂຽນຈົດຫມາຍກັບຄືນມາຍັງພວກເຂົາ.
[6]ນີ້ເປັນສຳເນົາຈົດຫມາຍຂອງຕັດເຕໄນ, ຜູ້ປົກຄອງແຂວງທີ່ຢູ່ອີກຟາກແມ່ນ້ຳ, ແລະ ເຊຕາກໂບເຊໄນ ແລະ
ຜູ້ຮ່ວມງານຂອງເຂົາທີ່ຢູ່ຟາກແມ່ນ້ຳ, ທີ່ເຂົາໄດ້ສົ່ງໄປຍັງກະສັດດາຣິອຸດວ່າ.[7]ພວກເຂົາກ່າວວ່າ, ຮຽນກະສັດດາຣິອູດ,
"ຂໍສັນຕິສຸກທັງຫລາຍເປັນຂອງພະອົງ.
[8]ຂໍທູນກະສັດໃຫ້ຊົງຮູ້ວ່າ ພວກຂ້າພະອົງໄດ້ໄປທີ່ຢູດາ ໄປຍັງພຣະວິຫານຂອງພຣະເຈົ້າຜູ້ຍິ່ງໃຫຍ່. ກຳລັງສ້າງດ້ວຍກ້ອນຫີນຂະຫນາດໃຫຍ່
ແລະ ໄດ້ວາງໄມ້ເທິງກຳແພງເຫລົ່ານັ້ນ. ງານນີ້ກຳລັງຈະແລ້ວ ແລະ ດຳເນີນໄປໄດ້ດີໃນມືຂອງພວກເຂົາ.
[9]ພວກຂ້າພະອົງໄດ້ຖາມພວກຜູ້ອາວຸໂສວ່າ, "ໃຜໃຫ້ພາຣະກິດນີ້ແກ່ພວກທ່ານໃຫ້ສ້າງໃຫ້ສ້າງພຣະນິເວດ ແລະ
ກຳແພງເຫລົ່ານີ້?'[10]ພວກຂ້າພະອົງຍັງຖາມເຖິງລາຍຊື່ຂອງຄົນເຫລົ່ານັ້ນດ້ວຍ ເພື່ອພະອົງຈະຊົງຮູ້ຊື່ຂອງແຕ່ລະຄົນທີ່ໄດ້ນຳພວກເຂົາ.
[11]ພວກເຂົາໄດ້ຕອບ ແລະ ກ່າວວ່າ,' ພວກເຮົາເປັນຜູ້ຮັບໃຊ້ຂອງພຣະເຈົ້າອົງດຽວທີ່ຊົງເປັນພຣະເຈົ້າແຫ່ງຟ້າສະຫວັນ, ແລະ ແຜ່ນດິນໂລກ
ແລະ ເຮົາກຳລັງສ້າງພຣະວິຫານຫລັງນີ້ຂຶ້ນມາໃຫມ່ທີ່ໄດ້ເຄີຍສ້າງມາຫລາຍປີແລ້ວ
ເມື່ອກະສັດຜູ້ຍິ່ງໃຫຍ່ແຫ່ງອິສະຣາເອນໄດ້ຊົງສ້າງວິຫານຫລັງນີ້ ແລະ ດົນນານມາແລ້ວ.
[12]ແຕ່ເມື່ອບັນພະບຸຣຸດຂອງພວກເຮົາໄດ້ເຮັດໃຫ້ພຣະເຈົ້າແຫ່ງຟ້າສະຫວັນບໍ່ພໍໃຈ,
ພຣະອົງຈຶ່ງໄດ້ມອບພວກເຂົາໃຫ້ເນບູກາດເນັດຊາກະສັດແຫ່ງບາບີໂລນ,
ຜູ້ທີ່ໄດ້ຊົງທຳລາຍພຣະວິຫານຫລັງນີ້ແລະຊົງກວາດຕ້ອນປະຊາຊົນໄປເປັນຊະເລີຍໃນບາບີໂລນ.[13]ແຕ່ຢ່າງໃດກໍຕາມ,
ໃນປີທຳອິດໄຊຣັສໄດ້ຊົງເປັນກະສັດແຫ່ງບາບີໂລນ, ໄຊຣັສໄດ້ຊົງອອກຄຳສັ່ງໃຫ້ສ້າງພຣະວິຫານຂອງພຣະເຈົ້າຂຶ້ນໃຫມ່.
[14]ກະສັດໄຊຣັສໄດ້ສົ່ງສິ່ງຂອງທີ່ເປັນທອງຄຳ ແລະເງິນ ທີ່ເປັນຂອງພຣະວິຫານຂອງພຣະເຈົ້າ
ທີ່ເນບູກາດເນັດຊາໄດ້ນຳມາຈາກພຣະວິຫານໃນນະຄອນເຢຣູຊາເລັມມາຍັງວິຫານໃນບາບີໂລນ. ພະອົງໄດ້ຄືນສິ່ງເຫລົ່ານັ້ນໃຫ້ກັບເຊັດບັດຊາ,
ຜູ້ທີ່ພະອົງຊົງຕັ້ງໃຫ້ເປັນຜູ້ປົກຄອງຢູດາຍ[15]ພະອົງໄດ້ກ່າວກັບເຂົາວ່າ," ຈົ່ງນຳສິ່ງຂອງເຫລົ່ານີ້ໄປ. ຈົ່ງໄປ
ແລະເກັບສິ່ງຂອງເຫລົ່ານີ້ໃນພຣະວິຫານໃນເຢຣູຊາເລັມ. ໃຫ້ສ້າງພຣະວິຫານຂອງພຣະເຈົ້າຂຶ້ນມາໃຫມ່ນັ້ນ."
[16]ແລ້ວເຊັດບັດຊາຈຶ່ງວາງຮາກຖານວິຫານຂອງພຣະເຈົ້າ ໃນເຢຣູຊາເລັມ; ແລະດຳເນີນການກໍ່ສ້າງຢູ່, ແຕ່ຍັງບໍ່ແລ້ວ.'
[17]ບັດນີ້ຖ້າຫາກເລື່ອງນີ້ເປັນທີ່ພໍໃຈກະສັດ, ຂໍຊົງກວາດເບິ່ງເອກະສານໃນບາບີໂລນ ຖ້າຫາກຕັດສິນຈາກກະສັດໄຊຣັສ
ໃນການສ້າງພຣະວິຫານຂອງພຣະເຈົ້າໃນເຢຣູຊາເລັມ. ຍັງຢູ່ທີ່ນັ້ນ ແລ້ວກະສັດຊົງສົ່ງການຕັດສິນໃຈຂອງພະອົງມາຍັງພວກຂ້າພະອົງ.

 generated on Tue Jun 17 19:01:42 2025

6 [1]ດັ່ງນັ້ນ ກະສັດຈຶ່ງຊົງບັນຊາ ໃຫ້ກວດຄົ້ນເບິ່ງຫາເອກກະສານປະຈຳວັງໃນບາບີໂລນ.[2]ໄດ້ພົບຫນັງສືມ້ວນຫນຶ່ງໃນເມືອງເອັກບາທານາ
ແຂວງເມເດຍ; ຊຶ່ງມີຖ້ອຍຄຳດັ່ງຕໍ່ໄປນີ້:

[3]ໃນປີທີຫນຶ່ງຂອງກະສັດໄຊຣັສ, ໄຊຣັສ ໄດ້ອອກຄຳສັ່ງໃຫ້ສ້າງພຣະວິຫານຂອງພຣະເຈົ້າຂຶ້ນໃຫມ່ທີ່ນະຄອນ ເຢຣູຊາເລັມ:
'ໃຫ້ເປັນສະຖານທີ່ສຳລັບຖວາຍບູຊາ, ໃຫ້ວາງຮາກຖານຂອງສະຖານທີ່ນັ້ນ, ໃຫ້ຄວາມສູງຂອງພຣະວິຫານນັ້ນໄດ້ຫົກສິບສອກ,
ແລະກວ້າງຫົກສິບສອກ,[4]ທີ່ເຮັດດ້ວຍຫີນຂະຫນາດໃຫຍ່ສາມຊັ້ນ ແລະຊັ້ນທີ່ເຮັດດ້ວຍໄມ້ຫນຶ່ງຊັ້ນ,
ແລະໃຫ້ໃຊ້ຄ່າໃຊ້ຈ່າຍຕົກເປັນຂອງຄັງຫລວງ.[5]ບັດນີ້ຈົ່ງນຳເຄື່ອງໃຊ້ຄື ຄຳ ແລະ ເງິນ ເປັນຂອງພຣະວິຫານຂອງພຣະເຈົ້າ,
ທີ່ເນບູກາດເນັດຊາໄດ້ຊົງນຳມາຈາກວິຫານໃນນະຄອນເຢຣູຊາເລັມໄປຍັງບາບີໂລນ
ແລະສິ່ງເຫລົ່ານັ້ນກັບໄປຍັງວິຫານໃນນະຄອນເຢຣູຊາເລັມ. ທ່ານຈົ່ງເກັບສິ່ງເຫລົ່ານີ້ໄວ້ໃນພຣະວິຫານຂອງພຣະເຈົ້າ.'
[6]ບັດນີ້ຜູ້ປົກຄອງແຂວງ, ທີ່ຢູ່ອີກຟາກຫນຶ່ງຂອງແມ່ນ້ຳ, ເຊຕາກໂບເຊໄນ, ແລະ ລວມທັງບັນດາເຈົ້າຫນ້າທີ່ ຢູ່ໃນແຂວງນັ້ນ, ທີ່ຢູ່ອີກຟາກແມ່ນ້ຳ,
ຈົ່ງອອກໄປຫ່າງເຖີດ![7]ຈົ່ງປ່ອຍໃຫ້ງານຂອງພຣະວິຫານຂອງພຣະເຈົ້າ ດຳເນີນໄປເອງ. ຜູ້ປົກຄອງ ແລະ
ຜູ້ອາວຸໂສຊາວຢິວຈະສ້າງພຣະວິຫານຂອງພຣະເຈົ້າແຫ່ງນີ້ທີ່ສະຖານທີ່ນັ້ນ.
[8]ເຮົາສັ່ງທ່ານວ່າ ທ່ານຕ້ອງເຮັດແນວນີ້ກັບພວກຜູ້ວ່າວຸໂສຊາວຢິວເຫລົ່ານີ້ສ້າງພຣະວິຫານຂອງພຣະເຈົ້າວ່າ:
ເງິນທຶນຈາກເຄື່ອງຂອງກະສັດທີ່ຢູ່ຟາກແມ່ນ້ຳຈະໃຊ້ເພື່ອຈ່າຍໃຫ້ຄົນເຫລົ່ານີ້ເພື່ອພວກເຂົາບໍ່ຕ້ອງຢຸດການເຮັດວຽກຂອງພວກເຂົາ.
[9]ສິ່ງໃດທີ່ຕ້ອງການ - ບໍ່ວ່າຈະເປັນບັນດາງົວຫນຸ່ມ, ແກະໂຕຜູ້, ຫລື ລູກແກະສຳລັບເຄື່ອງບູຊາແດ່ພຣະເຈົ້າແຫ່ງຟ້າສະຫວັນ, ເຂົ້າເດືອຍ,
ເກືອ, ເຫລົ້າອະງຸ່ນ ຫລື ນ້ຳມັນຫມາກກອກເທດ ຕາມຄຳສັ່ງຂອງພວກປະໂລຫິດໃນເຢຣູຊາເລັມ - ຈົ່ງເຮັດສິ່ງເຫລົ່ານີ້ແກ່ເຂົາທຸກວັນບໍ່ຂາດ.
[10]ຈົ່ງເຮັດດັ່ງນີ້ເພື່ອຈະຖວາຍເຄື່ອງບູຊາແດ່ພຣະເຈົ້າແຫ່ງຟ້າສະຫວັນ ແລະອະທິຖານເພື່ອເຮົາ, ກະສັດ, ແລະ ບັນດາລູກຂອງເຮົາ.
[11]ເຮົາສັ່ງວ່າຖ້າຜູ້ໃດທີ່ບໍ່ເຮັດຕາມຄຳສັ່ງນີ້, ຕ້ອງຖືກຖອນຄານຫາມອອກຈາກບ້ານຂອງເຂົາ ແລະເຂົາຕ້ອງສຽບໄວ້ເທິງໄມ້ນັ້ນ.
ບ້ານຂອງເຂົາຈະກາຍເປັນຂີ້ເຫຍື່ອເພາະເລື່ອງນີ້.[12]ຂໍພຣະເຈົ້າຊົງເຮັດໃຫ້ພຣະນາມຊື່ຂອງພຣະອົງສະຖິດຢູ່ທີ່ນັ້ນ ໄດ້ຊົງລົບລ້າງບໍ່ວ່າກະສັດ
ອົງໃດຫລືຊົນຊາດໃດທີ່ຍົກມືຂຶ້ນປ່ຽນແປງຄຳສັ່ງນີ້, ທຳລາຍພຣະວິຫານຂອງພຣະເຈົ້າໃນເຢຣູຊາເລັມ ແຫ່ງນີ້. ເຮົາ, ຄືດາຣິອຸດ,
ເປັນຜູ້ອອກຄຳສັ່ງນີ້. ຂໍໃຫ້ຂະຫຍັນຂັນແຂງທີ່ຈະເຮັດໃຫ້ສຳເລັດ!"
[13]ຈາກນັ້ນເພາະພາຣາຊກິດໄດ້ສົ່ງມາຈາກກະສັດດາຣິອັດ, ຕັດເຕໄນ, ຜູ້ປົກຄອງຂອງມົນທົນທີ່ຢຸ່ອີກຟາກຂອງແມ່ນ້ຳ, ແລະ ເຊຕາກໂບເຊໄນ
ແລະ ພວກຜູ້ຮ່ວມງານຂອງເຂົາ, ກໍປະຕິບັດຕາມຄຳສັ່ງຂອງກະສັດດາຣິອັດທຸກປະການ.
[14]ດັ່ງນັ້ນພວກຜູ້ອາວຸໂສຊາວຢິວຈຶ່ງໄດ້ສ້າງຕາມທີ່ຮັກກາຍ ແລະ ເຊກາຣີຢາເຊື້ອສາຍຂອງອິດໂດໄດ້ສັ່ງຕາມຄຳພວກຜູ້ເຜີຍພຣະວັຈະນະ.
ພວກເຂົາໄດ້ສ້າງຕາມພຣະບັນຊາຂອງພຣະເຈົ້າແຫ່ງອິສະຣາເອນ ແລະ ໄຊຣັສ, ດາຣິອັດ, ແລະ ອາກຕາເຊເຊັດ, ກະສັດແຫ່ງເປີເຊຍ.
[15]ພວກເຂົາໄດ້ກໍ່ສ້າງພຣະວິຫານສຳເລັດໃນວັນທີສາມຂອງເດືອນອາດາກ, ໃນປີທີຫົກໃນຣາຊການ ກະສັດດາຣິອັດ.
[16]ບັນດາຄົນອິສະຣາເອນ, ປະໂລຫິດ, ຄົນເລວີ,
ແລະພວກຊະເລີຍທີ່ເຫລືອກໍໄດ້ສະຫລອງການຖວາຍພຣະວິຫານຂອງພຣະເຈົ້າແຫ່ງນີ້ດ້ວຍຄວາມຊື່ນຊົມຍິນດີ.
[17]ພວກເຂົາຖວາຍງົວຫນຸ່ມຫນຶ່ງຮ້ອຍໂຕ, ແກະໂຕຜູ້ຫນຶ່ງຮ້ອຍໂຕ, ແລະລູກແກະສີ່ຮ້ອຍໂຕ ສຳລັບການຖວາຍວິຫານຂອງພຣະເຈົ້າ.
ແລະໄດ້ຖວາຍແບ້ໂຕຜູ້ສິບສອງໂຕເປັນເຄື່ອງບູຊາລົບລ້າງບາບໃຫ້ກັບຄົນອິສະຣາເອນດ້ວຍ, ໂຕຫນຶ່ງສຳລັບເຜົ່າອິສະຣາເອນ.
[18]ພວກເຂົາໄດ້ມອບຫມາຍພວກປະໂລຫິດ ແລະຄົນເລວີໃຫ້ເຮັດວຽກຕ່າງໆ ໃນການປະຕິບັດພຣະເຈົ້າໃນເຢຣູຊາເລັມດ້ວຍ,
ຕາມທີ່ມີຂຽນໄວ້ໃນຫນັງສືຂອງໂມເຊ.
[19]ດັ່ງນັ້ນຄົນເຫລົ່ານັ້ນທີ່ຖືກກວາດຕ້ອນໄປເປັນຊະເລີຍກໍໄດ້ສະຫລອງເທສະການປັສະຄາໃນວັນທີສິບສີ່ຂອງເດືອນທີຫນຶ່ງ.
[20]ພວກປະໂລຫິດແລະຄົນເລວີທຸກຄົນກໍໄດ້ຊຳຣະຕົວເອງໃຫ້ບໍຣິສຸດ
ແລະຂ້າແກະປັສະຄາເປັນເຄື່ອງບູຊາສຳລັບຄົນເຫລົ່ານັ້ນທັງຫມົດທີ່ຖືກກວາດຕ້ອນໄປເປັນຊະເລີຍ, ລວມທັງຕົວພວກເຂົາເອງດ້ວຍ.
[21]ຄົນອິສະຣາເອນໄດ້ກິນຊີ້ນແກະປັສະຄາທີ່ເປັນຄົນໄດ້ກັບມາຈາກການເປັນຊະເລີຍ ແລະໄດ້ແຍກຕົວເອງຈາກການເປັນມົນທິນ
ຂອງຊົນຊາດໃນແຜ່ນດິນນັ້ນ ແລະ ໄດ້ສະແຫວງຫາພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ.
[22]ພວກເຂົາໄດ້ສະຫລອງເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງດ້ວຍຄວາມຊື່ນຊົມຍິນດີເປັນເວລາເຈັດວັນ, ເພາະພຣະຢາເວ
ໄດ້ເຮັດໃຫ້ພວກເຂົາມີຄວາມຊື່ນຊົມຍິນດີ ແລະໄດ້ຊົງປ່ຽນກະສັດແຫ່ງອັດຊີເຣຍ ສະຫນັບສະຫນູນພວກເຂົາໃນການສ້າງວິຫານ,
ພຣະວິຫານຂອງພຣະເຈົ້າແຫ່ງອິສະຣາເອນ.

 generated on Tue Jun 17 19:01:42 2025

7 1ຫລັງຈາກນີ້ໃນຣາຊການຂອງອາກຕາເຊເຊັດເປັນກະສັດແຫ່ງເປີເຊຍ, ເອຊະຣາ ລາວໄດ້ສືບເຊື້ອສາຍມາຈາກມະຫາປະໂລຫິດອາໂຣນ.
ບັນພະບຸຣຸດຂອງເອຊະຣາຄື ເສຣາອີຢາ, ອາຊາຣີຢາ, ຮິນກີຢາ,2ຊານລູມ, ຊາດົກ, ອາຮີຕູບ,3ອາມາຣີຢາ, ອາຊາຣີຢາ, ເມຣາອີໂຢດ,
4ເຊຣາຮີຢາ, ອຸດຊີ, ບຸກກີ,5ອາບີຊູອາ, ຟີເນຮາ, ເອເລອາຊາ, ຜູ້ເປັນລູກຊາຍຂອງອາໂຣນມະຫາປະໂລຫິດ.

6ເອຊະຣາ ໄດ້ຂຶ້ນມາຈາກບາບີໂລນ ແລະເຂົາເປັນຄົນທຳມະດາທີ່ມີຄວາມຊຳນານໃນ ພຣະບັນຍັດຂອງ ໂມເຊທີ່ພຣະຢາເວ,
ພຣະເຈົ້າແຫ່ງອິສະຣາເອນ, ໄດ້ປຣະທານ. ໃຫ້ກະສັດ ໄດ້ປຣະທານສິ່ງທີ່ເຂົາທູນຂໍແກ່ເຂົາ ເພາະວ່າພຣະຫັດຂອງພຣະຢາເວ
ໄດ້ຢູ່ນຳພວກເຂົາ.7ໃນປີທີເຈັດຂອງກະສັດອາກຕາເຊເຊັດ ມີພົງພັນຂອງອິສະຣາເອນບາງຄົນ, ແລະບັນດາປະໂລຫິດ, ຄົນເລວີ,
ນັກຮ້ອງປະຈຳພຣະວິຫານ, ຄົນເຝົ້າປະຕູ ແລະຄົນເຫລົ່ານັ້ນໄດ້ຮັບມອບຫມາຍໃຫ້ປະຕິບັດໃນພຣະວິຫານ ກໍໄດ້ຂຶ້ນໄປຍັງເຢຣູຊາເລັມ.
8ເຂົາໄດ້ມາເຖິງເຢຣູຊາເລັມໃນເດືອນທີຫ້າຂອງປີດຽວກັນນັ້ນ.9ເຂົາເຈົ້າອອກຈາກບາບີໂລນໃນວັນທີຫນຶ່ງ ເດືອນທີຫນຶ່ງ.
ວັນທີເຂົາໄດ້ມາເຖິງເຢຣູຊາເລັມ, ຄືວັນທີຫນຶ່ງ ເດືອນຫ້າ. ເພາະວ່າພຣະຫັດອັນປະເສີດຂອງພຣະອົງໄດ້ມາເຖິງເຢຣູຊາເລັມ,
ເພາະວ່າພຣະຫັດອັນປະເສີດໄດ້ຢູ່ກັບເຂົາ.10ເອຊະຣາໄດ້ຕັ້ງໃຈຂອງເຂົາທີ່ຈະປຶກສາ, ຄືປະຕິບັດ, ແລະ ສອນກົດເກນ, ແລະ
ກົດຂໍ້ບັງຄັບຂອງພຣະບັນຍັດພຣະຢາເວ.
11ກະສັດອາກຕາເຊເຊັດ ໄດ້ມອບຈົດຫມາຍໃຫ້ເອຊະຣາ ປະໂລຫິດ ແລະ ນັດຣຽນຜູ້ທີ່ມີຄວາມຮູ້ດ້ານກົດບັນຍັດແລະກົດເກນ
ຂອງພຣະບັນຍັດພຣະຢາເວ ສຳລັບອິສະຣາເອນ:12"ຈາກກະສັດ ອາກຕາເຊເຊັດ, ເຫນືອກະສັດທັງຫລາຍເຖິງເອຊະຣາ, ປະໂລຫິດທີ່ຣຽນ
ແລະສຶກສາບັນຍັດພຣະເຈົ້າແຫ່ງຟ້າສະຫວັນ:13ເຮົາສັ່ງວ່າຄົນໃດທີ່ມາຈາກອິສະຣາເອນ ໃນຣາຊອານາຈັກພ້ອມກັບບັນດາປະໂລຫິດ ແລະ
ຄົນເລວີ ພວກເຂົາຜູ້ທີ່ປຣາຖນາຈະໄປເຢຣູຊາເລັມ, ກໍໃຫ້ໄປກັບເຈົ້າໄດ້.
14ເຮົາກະສັດ, ແລະທີ່ປຶກສາທັງເຈັດຄົນຂອງເຮົາ, ສົ່ງພວກເຈົ້າທັງຫມົດອອກໄປເພື່ອຖາມກ່ຽວກັບຢູດາ ແລະເຢຣູຊາເລັມ
ຕາມພຣະບັນຍັດຂອງພຣະເຈົ້າ, ທີ່ຢູ່ໃນມືຂອງພວກເຈົ້າ.15ເຈົ້າຕ້ອງນຳເງິນ ແລະທອງຄຳທີ່ພວກເຂົາໄດ້ຖວາຍແກ່ພຣະເຈົ້າແຫ່ງອິສະຣາເອນ,
ຜູ້ສະຖິດຢູ່ໃນເຢຣູຊາເລັມ.16ເງິນ ແລະທອງຄຳທັງຫມົດທີ່ໃຫ້ດ້ວຍຄວາມສະຫມັກໃຈທີ່ທຸກຄົນໃນບາບີໂລນ
ໄດ້ມອບກັບສິ່ງທີ່ໄດ້ສະຫມັກໃຈຖວາຍຈາກຄົນເຫລົ່ານັ້ນ ແລະພວກປະໂລຫິດ ແດ່ພຣະວິຫານຂອງພຣະເຈົ້າໃນເຢຣູຊາເລັມ.
17ດັ່ງນັ້ນຈົ່ງຊື້ບັນດາງົວ, ແກະໂຕຜູ້, ແລະລູກແກະ, ເຄື່ອງບູຊາ, ແລະເຄື່ອງດື່ມບູຊາ, ໄປຢ່າງເຕັມທີ່
ຈົ່ງຖວາຍສິ່ງເຫລົ່ານີ້ເທິງແທ່ນບູຊາໃນພຣະວິຫານຂອງພຣະເຈົ້າໃນເຢຣູຊາເລັມ.18ຈົ່ງໃຊ້ເງິນ ແລະທອງຄຳທີ່ເຫລືອຕາມທີ່ພີ່ນ້ອງ
ແລະເພື່ອນຮ່ວມຊາດຂອງພວກເຈົ້າໄດ້ເຫັນດີ, ເພື່ອໃຫ້ພຣະເຈົ້າຂອງພວກເຈົ້າຊົງອະພັຍ.
19ຈົ່ງວາງເຄື່ອງໃຊ້ເຫລົ່ານີ້ມອບໃຫ້ກັບເຈົ້າດ້ວຍສະຫມັກໃຈຕໍ່ພຣະພັກພຣະອົງສຳລັບການປະຕິບັດໃນພຣະວິຫານພຣະເຈົ້າໃນນະຄອນເຢຣູຊາເລັມ.
20ສິ່ງອື່ນໃດທີ່ຕ້ອງການສຳລັບພຣະວິຫານຂອງພຣະເຈົ້າທີ່ເຈົ້າຈະຕ້ອງຈັດຫາ, ຈົ່ງເອົາຄ່າຈ່າຍຈາກຄັງຫລວງໄດ້.
21ເຮົາ, ກະສັດອາຕາເຊເຊັດ, ໄດ້ອອກຄຳສັ່ງເຖິງບັນດາຄັງຂ້າຣາຊການທັງຫມົດທີ່ຢູ່ອີກຟາກຂອງແມ່ນ້ຳວ່າ, ສິ່ງໃດທີ່ ເອຊະຣາ
ຂໍຈາກທ່ານກໍຈົ່ງໃຫ້ເຕັມທີ່,22ເຖິງເງິນສາມພັນສີ່ຮ້ອຍ ກິໂລກຣາມ, ເຂົ້າເດືອຍສິບພັນກິໂລກຣາມ, ເຫລົ້າອະງຸ່ນສອງພັນລິດ,
ນ້ຳມັນຫມາກກອກເທດສອງພັນລິດ, ແລະ ເກືອໃຫ້ເອົາຕາມທີ່ຕ້ອງການ.23ສິ່ງໃດທີ່ມາຈາກພຣະບັນຊາພຣະເຈົ້າແຫ່ງຟ້າສະຫວັນ,
ຈົ່ງເຮັດດ້ວຍຄວາມທຸ້ມເທເພື່ອພຣະວິຫານຂອງພຣະອົງ. ເພາະເປັນຫຍັງຈຶ່ງເຮັດຄວາມໂກດຮ້າຍຂອງພຣະອົງລົງມາເຫນືອອານາຈັກຂອງເຮົາ
ແລະ ບັນດາລູກຂອງເຮົາ?
24ເຮົາແຈ້ງພວກເຂົາໃຫ້ຮູ້ກ່ຽວກັບເຈົ້າ ທີ່ບໍ່ໃຫ້ເກັບພາສີກັບພວກປະໂລຫິດ, ພວກເລວີ, ພວກນັກດົນຕຣີ, ຄົນເຝົ້າປະຕູ,
ຄົນທີ່ໄດ້ມອບຫມາຍໃຫ້ເຮັດຫນ້າທີ່ໃນພຣະວິຫານແລະຄົນຮັບໃຊ້ໃນພຣະນິເວດຂອງພຣະເຈົ້າອົງນີ້.
25ເອຊະຣາ, ດ້ວຍສະຕິປັນຍາທີ່ພຣະເຈົ້າໄດ້ມອບໃຫ້ແກ່ເຈົ້າ, ເຈົ້າຕ້ອງແຕ່ງຕັ້ງຜູ້ພິພາກສາ
ແລະຄົນທີ່ເຂົ້າໃຈໃນການເຮັດຫນ້າທີ່ຕໍ່ປະຊາຊົນທັງຫມົດທີ່ຢູ່ແມ່ນ້ຳຟາກນັ້ນອີກ, ແລະປະຕິບັດຄົນທີ່ຮູ້ຈັກພຣະບັນຍັດຂອງພຣະເຈົ້າຂອງເຈົ້າ.
ເຈົ້າຕ້ອງສອນຄົນເຫລົ່ານີ້ໃຫ້ຮູ້ຈັກບັນຍັດ.26ຈົ່ງລົງໂທດຜູ້ໃດກໍຕາມທີ່ບໍ່ເຮັດຕາມພຣະບັນຍັດຂອງພຣະເຈົ້າ ຫລືບັນຍັດຂອງກະສັດຢ່າງສຸດໃຈ,
ບໍ່ວ່າຈະເປັນໂທດເຖິງຕາຍ, ການເນຣະເທດ ຖືກຢຶດຊັບສິນ, ຫລືຖືກຈຳຄຸກ.
27ສາທຸການແດ່ພຣະຢາເວ, ພຣະເຈົ້າຂອງບັນພະບຸຣຸດຂອງເຮົາ, ຜູ້ທີ່ວາງທັງຫມົດນີ້ໃນໃຈຂອງກະສັດ
ເພື່ອຖວາຍກຽຕຕໍ່ພຣະວິຫານພຣະຢາເວ ໃນເຢຣູຊາເລັມ,28ແລະ ຜູ້ຂະຫຍາຍພັນທະສັນຍາອັນສັດຊື່ຕໍ່ຂ້ານ້ອຍຕໍ່ຫນ້າກະສັດ,
ທີ່ພວກປຶກສາຂອງພະອົງ, ແລະພວກຂ້າຣາຊການມີອຳນາດຂອງພຣະອົງ. ຂ້ານ້ອຍໄດ້ຮັບການເສີມກຳລັງຈາກພຣະຫັດພຣະຢາເວພຣະເຈົ້າ,
ຂອງຂ້ານ້ອຍ ແລະໄດ້ລວມຜູ້ນຳພວກອິສະຣາເອນໄປນຳຂ້ານ້ອຍ.


generated on Tue Jun 17 19:01:42 2025

8 [1]ຄົນເຫລົ່ານີ້ເປັນພວກຜູ້ນຳຂອງຄອບຄົວ ຂອງບັນພະບຸຣຸດຂອງພວກເຂົາ ທີ່ໄດ້ອອກຈາກບາບີໂລນ
ກັບຂ້ານ້ອຍໃນຣາຊການຂອງກະສັດອາກຕາເຊເຊັດ.[2]ຄືຈາກເຊື້ອສາຍເກໂຊນ. ຕະກຸນຟີເນຮາດ, ດານີເອນ. ຕະກຸນອີທາມາ, ຮັດຕຸ.
ຕະກູນຂອງດາວິດ,[3]ຜູ້ທີ່ເປັນເຊື້ອສາຍຂອງເກຊາຣີຢາ ຜູ້ທີ່ມາຈາກເຊື້ອສາຍປາຣົດ, ພ້ອມທັງຜູ້ຊາຍໃນຕະກຸນຂອງຕົນ 150 ຄົນ
ແລະທຸກຄົນມີທະບຽນບັນທຶກບອກເຖິງບັນພະບຸຣຸດຂອງພວກເຂົາ.

[4]ຈາກເຊື້ອສາຍຂອງປາຮາດ ໂມອາບ, ພ້ອມທັງຜູ້ຊາຍ ສອງຮ້ອຍຄົນທີ່ມາກັບເຂົາ.[5]ຈາກເຊື້ອສາຍ ເຊການີຢາ, ລູກຊາຍຂອງເບັນຢາຮາຊີເອນ
ຕະກຸນຊັດຕຸ ພ້ອມທັງພວກຜູ້ຊາຍສາມລ້ອຍຄົນທີ່ມາກັບເຂົາ.[6]ຈາກເຊື້ອສາຍອາດິນ, ເອບັດລູກຊາຍຂອງໂຢນາທານ ແລະ
ພ້ອມທັງພວກຜູ້ຊາຍຫ້າສິບຄົນ.[7]ຈາກເຊື້ອສາຍເອລາມ, ເຢຊາອີຢາລູກຊາຍຂອງອາທາລີຢາ ແລະ ພ້ອມທັງພວກຜູ້ຊາຍເຈັດສິບຄົນ.
[8]ຈາກເຊື້ອສາຍຂອງເຊຟາຕີຢາ, ຄືເຊບາດີຢາລູກຊາຍຂອງມີກາເອນ ແລະພ້ອມດ້ວຍຜູ້ຊາຍ ແປດສິບຄົນ.[9]ຈາກເຊື້ອສາຍໂຢອາບ,
ຄືໂອບາດີຢາລູກຊາຍຂອງເຢຮີເອນ ແລະພ້ອມທັງຜູ້ຊາຍສອງຮ້ອຍສິບແປດຄົນ.[10]ຈາກເຊື້ອສາຍຂອງບານີ,
ເຊໂລມິດລູກຊາຍຂອງໂຢສີຟີຢາກັບພວກຜູ້ຊາຍທີ່ມານຳເຂົາໄດ້ຈົດທະບຽນໄວ້ຫນຶ່ງຮ້ອຍຫົກສິບຄົນ[11]ຈາກເຊື້ອສາຍຂອງເບບາຍ,
ເຊກາຣີຢາລູກຊາຍຂອງເບບາຍ ແລະ ພ້ອມທັງພວກຜູ້ຊາຍຊາວແປດຄົນ.
[12]ຈາກເຊື້ອສາຍ ອາຊະກາດ, ໂຢຮານານລູກຊາຍຂອງຮັກກາຕານ ພ້ອມທັງຜູ້ຊາຍ 110 ຄົນ.[13]ຈາກເຊື້ອສາຍຂອງອາໂດນີກຳ, ເອລີເຟເລັດ,
ເຢອູເອນ, ແລະ ເຊມາອີຢາ ແລະພ້ອມທັງຜູ້ຊາຍຫົກສິບຄົນ.[14]ຈາກເຊື້ອສາຍບິກໄຫວ, ອູໄທ ແລະ ຊັກກູເຣ ແລະ ພ້ອມທັງຜູ້ຊາຍເຈັດສິບຄົນ.
[15]ຂ້ານ້ອຍໄດ້ລວມພວກທີ່ເດີນທາງບ່ອນຫ້ວຍນ້ຳໄຫລໄປສູ່ອາຮາວາ, ແລະເຮົາໄດ້ຕັ້ງຄ້າຍຢູ່ທີ່ນັ້ນສາມວັນ.
ຂ້ານ້ອຍໄດ້ກວາດເບິ່ງພວກປະຊາຊົນ ແລະພວກປະໂລຫິດ, ແຕ່ບໍ່ເຫັນເຊື້ອສາຍຂອງເລວີຢູ່ທີ່ນັ້ນເລີຍ.
[16]ດັ່ງນັ້ນຂ້ານ້ອຍຈຶ່ງສົ່ງຄົນໄປຫາເອລີເອເຊ, ອາຣີເອນ, ເຊມາອີຢາ, ເອນນາທານ, ຢາຣິບ, ແລະເອນນາທານ, ແລະນາທານ, ເຊກາຣີຢາ,
ແລະເມຊຸນລຳ ຜູ້ທີ່ເປັນພວກຜູ້ນຳ ແລະໄປຫາໂຢອີອາຣິບແລະເອນນາທານ.
[17]ຕໍ່ມາຂ້ານ້ອຍໄດ້ສົ່ງເຂົາໄປຫາອິດໂດ, ຜູ້ນຳກາສີຟີອາ. ຂ້ານ້ອຍບອກພວກເຂົາເວົ້າກັບອິດໂດແລະຍາດພີ່ນ້ອງຂອງເຂົາ,
ພວກຄົນຮັບໃຊ້ປະຈຳວິຫານອາສັຍຢູ່ໃນກາສີຟີອາ, ນັ້ນແມ່ນ, ຂໍໃຫ້ສົ່ງພວກຄົນຮັບໃຊ້ສຳລັບພຣະວິຫານຂອງພຣະເຈົ້າມາໃຫ້ເຮົາ.
[18]ດັ່ງນັ້ນດ້ວຍພຣະຄຸນຂອງພຣະເຈົ້າ ພວກເຂົາຈຶ່ງໄດ້ສົ່ງຊາຍຄົນຫນຶ່ງຊື່ເຊເຣບີຢາ, ທີ່ເປັນຄົນມີຄວາມສະຫລາດມາໃຫ້ເຮົາ
ເຂົາເປັນເຊື້ອສາຍຂອງເມຣາຣີ ລູກຊາຍຂອງຄົນເລວີຜູ້ເປັນລູກຊາຍຂອງອິສະຣາເອນ. ເຂົາໄດ້ມາພ້ອມບັນດາລູກຊາຍ
ແລະພີ່ນ້ອງສິບແປດຄົນ.[19]ພວກເຂົາຍັງສົ່ງຮາຊາບີຢາມາກັບເຂົາ. ແລ້ວຍັງມີເຢຊາອີຢາ, ຊຶ່ງເປັນຄົນຫນຶ່ງໃນບັນດາລູກຊາຍເມຣາຣີ,
ທີ່ມາກັບພວກພີ່ນ້ອງ ແລະລູກຊາຍຂອງເຂົາ, ລວມທັງຫມົດຊາວຄົນ.[20]ຈາກຄົນເຫລົ່ານັ້ນໄດ້ມອບຫມາຍໃຫ້ປະຕິບັດໃນວິຫານ, ຜູ້ທີ່ດາວິດ
ແລະຂ້າຣາຊການຂອງພະອົງໄດ້ມອບໃຫ້ປະຕິບັດຄົນເລວີ: ສອງຮ້ອຍຊາວຄົນ, ແຕ່ລະຄົນຂອງພວກເຂົາໄດ້ຮັບມອບຫມາຍຕາມຊື່.
[21]ແລ້ວຂ້ານ້ອຍກໍໄດ້ປະກາດໃຫ້ອົດອາຫານທີ່ຫ້ວຍອາຮາວາ ຂ້ານ້ອຍໄດ້ອອກຄຳສັ່ງໃຫ້ທຸກຄົນຖືສິນອົດອາຫານເພື່ອຖ່ອມໃຈພວກເຮົາເອງ
ລົງຕໍ່ພຣະພັກພຣະເຈົ້າ, ເພື່ອສະແຫວງຫາທາງຈາກພຣະອົງ, ເພື່ອເຮົາກັບລູກນ້ອຍໆຂອງເຮົາ, ແລະຊັບສິນທັງຫມົດຂອງເຮົາ.
[22]ຂ້ານ້ອຍບໍ່ກ້າຂໍທະຫານມ້າຈາກກະສັດ ເພາະຂ້ານ້ອຍບອກເພິ່ນວ່າ, ພຣະຫັດຂອງພຣະເຈົ້າເຮົາຢູ່ເຫນືອທຸກຄົນທີ່ໄວ້ວາງໃຈພຣະອົງ
ເພື່ອໃຫ້ເກີດຜົນດີ, ແຕ່ຣິທານຸພາບ ແລະຄວາມໂກດຮ້າຍຂອງພຣະອົງໄດ້ຢູ່ເທິງທຸກຄົນທີ່ລືມພວກພຣະອົງ.'[23]ດັ່ງນັ້ນເຮົາຈຶ່ງໄດ້ອົດອາຫານ
ແລະສະແຫວງຫາພຣະເຈົ້າກ່ຽວກັບເລື່ອງນີ້, ແລະ ເຮົາວິງວອນຕໍ່ພຣະອົງ.
[24]ຕໍ່ມາຂ້ານ້ອຍໄດ້ເລືອກຊາຍສິບສອງຄົນຈາກພວກທີ່ມີຕຳແຫນ່ງປະໂລຫິດຄື: ເຊເຣບີຢາ, ຮາຊາບີຢາ, ແລະ
ຄົນອື່ນໆອີກສິບຄົນຈາກພວກປະໂລຫິດຊັ້ນຜູ້ນຳ.[25]ແລ້ວຂ້ານ້ອຍໄດ້ສັ່ງເອົາເຄື່ອງໃຊ້ເງິນ, ຄຳ, ແລະ
ເຄື່ອງຖວາຍສຳລັບພຣະວິຫານຂອງພຣະເຈົ້າທີ່ກະສັດ, ພວກທີ່ປຶກສາ, ແລະ ບັນດາຂ້າຣາຊາການຂອງເພິ່ນ, ແລະ ປະຊາຊົນອິສະຣາເອນ
ໄດ້ມອບສິ່ງຂອງເຫລົ່ານັ້ນໃຫ້ພວກປະໂລຫິດຢ່າງເຕັມໃຈ.
[26]ດັ່ງນັ້ນຂ້ານ້ອຍໄດ້ສັ່ງນ້ຳຫນັກເງິນຊາວຫ້າໂຕນ ເຄື່ອງໃຊ້ເປັນເງິນລ້ອຍອັນ ຫນັກ ເຈັດສິບກຣາມ,
[27]ແລະທອງຄຳຫນັກສາມພັນສີ່ຮ້ອຍກິໂລກຣາມ ຖວັຍຄຳຊາວໃບຫນັກແປດສິບສີ່ກິໂລກຣາມ
ຖ້ວຍທອງສຳຣິດຂັດມັນຢ່າງດີມີຄ່າເທົ່າກັບທອງຄຳ.
[28]ແລ້ວຂ້ານ້ອຍໄດ້ກ່າວກັບພວກເຂົາວ່າ," ພວກທ່ານໄດ້ອຸທິດຕົນແດ່ພຣະຢາເວ, ແລະ ເຄື່ອງໃຊ້ເຫລົ່ານີ້ເຊັ່ນກັນ ເງິນ,
ແລະທອງຄຳເປັນເຄື່ອງຖວາຍດ້ວຍຄວາມສະຫມັກໃຈແດ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກທ່ານ.
[29]ຈົ່ງເຝົ້າເບິ່ງແລະຮັກສາສິ່ງຂອງເຫລົ່ານີ້ ຈົນກວ່າພວກທ່ານຈະຊັ່ງນ້ຳຫນັກສິ່ງຂອງເຫລົ່ານີ້ຕໍ່ຫນ້າພວກທີ່ເປັນປະໂລຫິດ, ຄົນເລວີ,
ແລະພວກຜູ້ນຳຂອງຕະກຸນຂອງບັນພະບຸຣຸດຂອງອິສະຣາເອນ ໃນນະຄອນເຢຣູຊາເລັມໃນຫ້ອງພຣະວິຫານຂອງພຣະເຈົ້າ."[30]ພວກປະໂລຫິດ
ແລະ ພວກເລວີໄດ້ຮັບເງິນ, ທອງຄຳ, ແລະເຄື່ອງໃຊ້ຕ່າງໆ ທີ່ໄດ້ສັ່ງນ້ຳຫນັກແລ້ວເພື່ອຈະນຳສິ່ງຂອງເຫລົ່ານີ້ໄປຍັງເຢຣູຊາເລັມ,
ຍັງພຣະວິຫານຂອງພຣະເຈົ້າຂອງເຮົາ.
[31]ເຮົາໄດ້ອອກໄປຈາກຫ້ວຍອາຮາວາໃນວັນທີສິບສອງຂອງເດືອນທີຫນຶ່ງໄປຍັງເຢຣູຊາເລັມ. ພຣະຫັດຂອງພຣະເຈົ້າຢູ່ເຫນືອເຮົາ;
ພຣະອົງໄດ້ຊົງປົກປ້ອງເຮົາຈາກມືສັດຕຣູແລະບັນດາຜູ້ທີ່ໄດ້ປຣາຖນາທີ່ຈະຊຸ້ມຄອຍເຮົາຢູ່ຕາມທາງ.[32]ດັ່ງນັ້ນ ເຮົາໄດ້ເຂົ້າມາເຢຣູຊາເລັມ
ແລະພັກທີ່ນີ້ສາມວັນ.
[33]ແລ້ວວັນທີສີ່ກໍໄດ້ມີການຊັ່ງນ້ຳຫນັກເງິນ, ທອງຄຳ ແລະເຄື່ອງໃຊ້ໃນພຣະວິຫານຂອງພຣະເຈົ້າໃນການດູແລຂອງເມເຣໂມດ
ລູກຊາຍຂອງອຸຣີຢາ, ແລະ ເອເຣອາຊາລູກຊາຍຂອງຟີເນຮາ, ໂຢຊາບັດລູກຊາຍຂອງເຢຊູອາ ແລະໂນອາອີຢາ ລູກຊາຍຂອງບິນນູອີ.
[34]ທຸກໆສິ່ງໄດ້ຖືກສັ່ງນ້ຳຫນັກ ແລະໄດ້ບັນທຶກໄວ້ໃນຕອນນັ້ນ.
[35]ປະຊາຊົນໄດ້ຖືກກວາດຕ້ອນມາຈາກການເປັນຊະເລີຍໄດ້ຖວາຍເຄື່ອງເຜົາບູຊາແດ່ພຣະເຈົ້າຂອງອິສະຣາເອນ:
ຄືງົວໂຕຜູ້ສິບສອງໂຕສຳຫລັບຄົນອິສະຣາເອນ ທັງຫມົດ, ແລະແກະໂຕຜູ້ເກົ້າສິບຫົກໂຕ, ລູກແກະເຈັດສິບໂຕ,
ແບ້ຜູ້ສອງໂຕເປັນເຄື່ອງບູຊາລົບລ້າງບາບທັງຫມົດ. ນີ້ເປັນເຄື່ອງເຜົາບູຊາແກ່ພຣະຢາເວ.

 generated on Tue Jun 17 19:01:42 2025

36ແລ້ວພວກເຂົາໄດ້ມອບເອກກະສານທີ່ກະສັດມອບໃຫ້ນັ້ນໄປໃຫ້ຜູ້ປົກຄອງແລະບັນດາຂ້າຣາຊການຂອງແຂວງທາງພາກຕາເວັນຕົກແມ່ນ້ຳເອີຟຣັດ,
ດັ່ງນັ້ນພວກເຂົາຈຶ່ງໄດ້ຊ່ວຍເຫລືອປະຊາຊົນແລະເພື່ອວິຫານຂອງພຣະເຈົ້າ.


generated on Tue Jun 17 19:01:42 2025

9 [1]ຫລັງຈາກເຫດການເຫລົ່ານີ້, ພວກຫົວຫນ້າໄດ້ເຂົ້າມາຫາຂ້ານ້ອຍ ແລະໄດ້ກ່າວວ່າ, "ຊົນຊາດອິສະຣາເອນ, ບັນດາປະໂລຫິດ,
ແລະຄົນເລວີໄດ້ແຍກຕົວເອງຈາກຊົນຊາດຂອງແຜ່ນດິນອື່ນໆ ແລະສິ່ງທີ່ຫນ້າກຽດຂອງພວກເຂົາ ຄື: ຈາກຊາວການາອານ, ຄົນຮິດຕີ,
ແພຣີຊິດ, ເຢບຸດ, ອຳໂມນ, ໂມອາບ, ເອຢິບ, ອາໂມຣິດ.[2]ເພາະພວກເຂົາໄດ້ຮັບບັນດາລູກຜູ້ຍິງແລະລູກຜູ້ຊາຍ, ຂອງບັນດາຄົນເຫລົ່ານັ້ນມາ
ແລະໄດ້ປະປົນຊົນຊາດບໍຣິສຸດກັບຊົນຊາດຂອງແຜ່ນດິນອື່ນໆ, ແລະພວກຫົວຫນ້າ ແລະພວກຜູ້ນຳກໍໄດ້ເລີ່ມກໍຄວາມບໍ່ສັດຊື່ນີ້."

[3]ເມື່ອຂ້ານ້ອຍໄດ້ຍິນເຊັ່ນນີ້, ຂ້ານ້ອຍກໍຈີກເສື້ອຜ້າ ແລະ ເສື້ອຄຸມ ແລະ ດຶງຜົມ, ແລະ ຫນວດອອກຈາກຫົວແລ້ວຖິ້ມ, ແລະ
ນັ່ງລົງດ້ວຍຄວາມສິ້ນຫວັງ.[4]ຄົນເຫລົ່ານີ້ທັງຫມົດເບິ່ງຄືຢ້ານຢຳຕໍ່ຖ້ອຍຄຳຂອງພຣະເຈົ້າແຫ່ງອິສະຣາເອນ
ກ່ຽວກັບຄວາມບໍ່ສັດຊື່ນີ້ກໍໄດ້ມາລວມໂຕກັນກັບຂ້ານ້ອຍ ຂະນະທີ່ຂ້ານ້ອຍກຳລັງນັ່ງລົງດ້ວຍຄວາມລະອາຍໃຈ
ຈົນເຖິງເວລາຖວາຍເຄື່ອງບູຊາຕອນແລງ.
[5]ແຕ່ຕອນທີ່ຖວາຍເຄື່ອງບູຊາຕອນແລງ ຂ້ານ້ອຍລຸກຂຶ້ນຈາກສະພາບທີ່ຫນ້າລະອາຍໃນເສື້ອຜ້າແລະເສື້ອຄຸມທີ່ຈີກຂາດ, ແລະ ຄຸກເຂົ່າລົງ
ແລະ ຊູມືຕໍ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ.[6]ຂ້ານ້ອຍທູນວ່າ, "ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ, ຂ້ານ້ອຍອັບອາຍ ແລະ
ຂາຍຫນ້າທີ່ຈະເງີຍຫນ້າຂອງຂ້ານ້ອຍຕໍ່ພຣະອົງ, ແລະ ຄວາມຜິດຂອງຂ້ານ້ອຍ, ແລະ ຄວາມຜິດຂອງພວກຂ້ານ້ອຍກໍຂຶ້ນໄປເຖິງຟ້າສະຫວັນ.
[7]ຕັ້ງແຕ່ສມັຍບັນພະບຸຣຸດຂອງພວກຂ້ານ້ອຍຈົນເຖິງບັດນີ້ ພວກຂ້ານ້ອຍໄດ້ຢູ່ໃນຄວາມຜິດອັນໃຫຍ່ຫລວງໃນຄວາມບາບຂອງພວກຂ້ານ້ອຍ,
ບັນດາກະສັດຂອງພວກຂ້ານ້ອຍ, ແລະພວກປະໂລຫິດຂອງພວກຂ້ານ້ອຍ ແລະ ຖືກມອບໄວ້ໃນບັນດາກະສັດໃນໂລກນີ້, ໃຫ້ແກ່ດາບ
ເປັນຊະເລີຍ, ແລະ ການປຸ້ນ ແລະ ການອັບອາຍຂາຍຫນ້າຢ່າງທີ່ພວກຂ້ານ້ອຍເປັນທຸກວັນນີ້.
[8]ບັດນີ້ເປັນເວລາສັ້ນ, ຄວາມເມດຕາຈາກພຣະຢາເວ ພຣະເຈົ້າຂອງພວກເຮົາ ພຣະອົງຊົງປ່ອຍໃຫ້ພວກຂ້ານ້ອຍເປັນຜູ້ລອດຊີວິດຢູ່ ແລະ
ຊົງມອບທີ່ນັ້ນໃນສະຖານທີ່ອັນສັກສິດຂອງພຣະອົງ. ນີ້ເປັນເພາະພຣະເຈົ້າຂອງພວກຂ້ານ້ອຍທັງຫລາຍ
ໄດ້ຊົງເຮັດໃຫ້ສາຍຕາຂອງພວກຂ້ານ້ອຍໃສສະຫວ່າງຂຶ້ນ ແລະ ປຣະທານຄວາມບັນເທົາຈາກການເປັນທາດຂອງພວກຂ້ານ້ອຍ.
[9]ເພາະພວກຂ້ານ້ອຍເປັນທາດ, ແຕ່ພຣະເຈົ້າຂອງພວກຂ້ານ້ອຍ ບໍ່ໄດ້ລືມພວກເຮົາ ແຕ່ໄດ້ຂະຫຍາຍສັນຍາອັນສັດຊື່ຂອງພວກຂ້ານ້ອຍ.
ພຣະອົງໄດ້ຊົງເຮັດດັ່ງນີ້ ໃນສາຍຕາກະສັດແຫ່ງເປີເຊຍ ເພື່ອຈະປຣະທານກຳລັງໃຫມ່ແກ່ພວກຂ້ານ້ອຍ,
ດ້ວຍເຫດນີ້ພວກຂ້ານ້ອຍຈຶ່ງສາມາດສ້າງພຣະວິຫານຂອງພຣະເຈົ້າຂອງພວກຂ້ານ້ອຍຂຶ້ນໃຫມ່ໄດ້ ແລະ ຟື້ນຟູສ່ວນທີ່ຫັກເພພັງນັ້ນ.
ພຣະອົງໄດ້ຊົງເຮັດເຊັ່ນນີ້ ເພື່ອພຣະອົງຈະຊົງໃຫ້ກຳແພງທີ່ປອດພັຍແກ່ພວກເຂົາໃນຢູດາ ແລະເຢຣູຊາເລັມ.
[10]ແຕ່ບັດນີ້, ພຣະເຈົ້າຂອງຂ້ານ້ອຍທັງຫລາຍ, ຕໍ່ຈາກນີ້ພວກຂ້ານ້ອຍຈະກ່າວຫຍັງໄດ້? ພວກຂ້ານ້ອຍໄດ້ລືມພຣະບັນຍັດຂອງພຣະອົງ,
[11]ພຣະບັນຍັດຂອງພຣະອົງທີ່ພຣະອົງໄດ້ປຣະທານໃຫ້ຜູ້ຮັບໃຊ້ ແລະ ຜູ້ເຜີຍພຣະວັຈະນະຂອງພຣະອົງ, ເມື່ອພຣະອົງກ່າວວ່າ,
"ແຜ່ນດິນທີ່ເປິະເປື້ອນຈາກຊົນຊາດຂອງແຜ່ນດິນນັ້ນ. ດ້ວຍສິ່ງທີ່ຫນ້າລັງກຽດຂອງພວກເຂົາ.
ພວກເຂົາໄດ້ເຮັດໃຫ້ແຜ່ນດິນເຕັມໄປດ້ວຍມົນທິນຂອງພວກເຂົາ ຕັ້ງແຕ່ສຸດປາຍດ້ານຫນຶ່ງໄປຍັງສຸດປາຍອີກດ້ານຫນຶ່ງ.[12]ບັດນີ້,
ຢ່າຍົກລູກຜູ້ຍິງຂອງພວກເຈົ້າ ໃຫ້ລູກຜູ້ຊາຍຂອງພວກເຂົາ; ແລະ ຢ່າຮັບລູກຜູ້ຍິງຂອງພວກເຂົາມາເປັນລູກຜູ້ຍິງຂອງພວກເຈົ້າ ແລະ
ຢ່າສະແຫວງຫາສັນຕິສຸກ ແລະ ເອກະພາບຈາກພວກເຂົາເປັນນິດ, ເພື່ອພວກເຈົ້າຈະເຂັ້ມແຂງ ແລະ ກິນສິ່ງດີຂອງແຜ່ນດິນນັ້ນ,
ເພາະເຫດນີ້ພວກເຂົາຈະເຮັດໃຫ້ລູກຫລານຂອງພວກເຈົ້າໄດ້ຄອບຄອງແຜ່ນດິນນັ້ນຕະຫລອດໄປ."
[13]ແຕ່ຫລັງຈາກທຸກສິ່ງທີ່ເກີດຂຶ້ນກັບພວກຂ້ານ້ອຍ ເພາະການປະພຶດຊົ່ວຂອງພວກຂ້ານ້ອຍ ແລະ ຄວາມຜິດອັນໃຫຍ່ຫລວງຂອງພວກຂ້ານ້ອຍ,
ເນື່ອງຈາກພຣະອົງຄືພຣະເຈົ້າ, ຂອງພວກຂ້ານ້ອຍໄດ້ຊົງອົດກັ້ນພຣະທັຍຕໍ່ຄວາມບາບຊົ່ວຂອງພວກຂ້ານ້ອຍທີ່ສົມຄວນໄດ້ຮັບ ແລະ
ຊົງເຫລືອພວກຂ້ານ້ອຍທີ່ເປັນຜູ້ລອດຊີວິດ.[14]ເຮົາຄວນຈະລະເມີດບັນຍັດຂອງພຣະອົງອີກ
ແລະປະປົນກັບຊົນຊາດຕ່າງໆທີ່ຫນ້າກຽດເຫລົ່ານີ້ດ້ວຍການແຕ່ງງານຫລື? ພຣະອົງຈະບໍ່ໃຈຮ້າຍ ແລະທຳລາຍພວກຂ້ານ້ອຍ
ຈົນບໍ່ມີໃຜເຫລືອຢູ່ຈັກຄົນດຽວ ບໍ່ມີໃຜລອດເລີຍບໍ?
[15]ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນ, ພຣະອົງຊົງຊອບທັມ, ເພາະພວກຂ້ານ້ອຍຍັງເຫລືອຄົນລອດຊີວິດຢູ່ຫນ້ອຍຄົນໃນທຸກວັນນີ້.
ເບິ່ງແມ! ພວກຂ້ານ້ອຍຢູ່ທີ່ນີ້ຕໍ່ພຣະພັກພຣະອົງຄວາມຜິດຂອງພວກຂ້ານ້ອຍ
ເພາະບໍ່ມີໃຜຈັກຄົນດຽວທີ່ສາມາດຢືນຢູ່ຕໍ່ພຣະພັກພຣະອົງໄດ້ເພາະເຫດນີ້.

 generated on Tue Jun 17 19:01:42 2025

# 10

[1]ຂະນະທີ່ເອຊະຣາໄດ້ອະທິຖານ ແລະສາຣະພາບບາບ, ເຂົາໄດ້ຮ້ອງໄຫ້ ແລະ ຖິ້ມໂຕລົງຕໍ່ຫນ້າພຣະວິຫານຂອງພຣະເຈົ້າ.
ມີການຊຸມນຸມຄັ້ງໃຫຍ່ຂອງພວກອິສະຣາເອນ, ທັງພວກຜູ້ຊາຍ, ພວກຜູ້ຍິງ ແລະ ເດັກນ້ອຍກໍໄດ້ມາຮ່ວມຊຸມນຸມກັບເຂົາ,
ເພາະປະຊາຊົນໄດ້ຮ້ອງໄຫ້ຢ່າງໃຫຍ່.[2]ເຊການີຢາລູກຊາຍຂອງເຢຮີເອນ ເຊື້ອສາຍເອລາມ ຈຶ່ງໄດ້ກ່າວກັບອິດຊະຣາວ່າ,
"ພວກເຮົາບໍ່ໄດ້ສັດຊື່ຕໍ່ພຣະເຈົ້າຂອງເຮົາ ແລະ ໄດ້ແຕ່ງງານກັບພວກຜູ້ຍິງຕ່າງຊາດຈາກຊົນຊາດຂອງແຜ່ນດິນອື່ນໆ. ແຕ່ເຖິງຈະມີເລື່ອງເຊັ່ນນີ້
ກໍຍັງມີຄວາມຫວັງສຳລັບອິສະຣາເອນ.

[3]ດັ່ງນັ້ນ ບັດນີ້ ໃຫ້ເຮົາເຮັດພັນທະສັນຍາກັບພຣະເຈົ້າຂອງເຮົາທີ່ຈະປະພວກຜູ້ຍິງ ແລະລູກທັງຫລາຍຂອງພວກເຂົາໄປ
ຕາມພຣະບັນຊາຂອງອົງພຣະຜູ້ເປັນເຈົ້າ ແລະຄຳສັ່ງຂອງຄົນເຫລົ່ານັ້ນຜູ້ທີ່ຢຳເກງຕໍ່ພຣະບັນຍັດຂອງພຣະເຈົ້າຂອງເຮົາ,
ແລະຂໍໃຫ້ເປັນໄປຕາມກົດຫມາຍນັ້ນ.[4]ຈົ່ງລຸກຂຶ້ນເຖີດເພາະສິ່ງນີ້ເປັນສິ່ງທີ່ທ່ານຕ້ອງເຮັດໃຫ້ສຳເລັດ, ແລະເຮົາຈະຢູ່ກັບເຈົ້າ. ຈົ່ງເຂັ້ມແຂງ
ແລະເຮັດສິ່ງນີ້ເຖີດ."
[5]ດັ່ງນັ້ນເອຊະຣາຈຶ່ງໄດ້ລຸກຂຶ້ນ ແລະໄດ້ໃຫ້ພວກຫົວຫນ້າປະໂລຫິດ, ຄົນເລວີ, ແລະອິສະຣາເອນທັງຫມົດສັນຍາວ່າຈະເຮັດຕາມນີ້.
ດັ່ງນັ້ນພວກເຂົາທຸກຄົນຈຶ່ງໄດ້ໃຫ້ຄຳປະຕິຍານຢ່າງຫນັກແຫນ້ນ.[6]ແລ້ວ ເອຊະຣາ ອິດໄດ້ລຸກຂຶ້ນໄປຢູ່ຕໍ່ຫນ້າພຣະວິຫານຂອງພຣະເຈົ້າ
ແລະໄດ້ໄປທີ່ຫ້ອງຂອງເຢໂຮຮານານລູກຊາຍຂອງເອລີອາຊິບ. ເຂົາບໍ່ໄດ້ກິນເຂົ້າຈີ່ຫລືດື່ມນ້ຳເລີຍ,
ເນື່ອງຈາກເຂົາໂສກເສົ້າກ່ຽວກັບຄວາມບໍ່ສັດຊື່ຂອງຄົນເຫລົ່ານັ້ນທີ່ເຄີຍຕົກເປັນຊະເລີຍ.
[7]ດັ່ງນັ້ນພວກເຂົາຈຶ່ງໄດ້ສົ່ງຂ່າວໄປຍັງຢູດາ
ແລະເຢຣູຊາເລັມຕໍ່ປະຊາຊົນທັງຫມົດທີ່ໄດ້ກັບມາຈາກການເປັນຊະເລີຍໃຫ້ມາຊຸມນຸມກັນໃນເຢຣູຊາເລັມ.
[8]ຄົນໃດທີ່ບໍ່ໄດ້ມາຫລັງຈາກສາມວັນຕາມຄຳສັ່ງຂອງພວກຫົວຫນ້າ ແລະພວກຜູ້ອາວຸໂສ ຈະຖືກຍຶດຊັບສິນບັດຂອງເຂົາທັງຫມົດ
ແລະຖືກຕັດອອກຈາກການຊຸມນຸມຄັ້ງໃຫຍ່ຂອງປະຊາຊົນທີ່ກັບມາຈາກການເປັນຊະເລີຍ.
[9]ດັ່ງນັ້ນພວກຜູ້ຊາຍທຸກຄົນຂອງເຜົ່າຢູດາ ແລະເຜົ່າເບັນຢາມິນກໍໄດ້ມາຊຸມນຸມກັນໃນເຢຣູຊາເລັມພາຍໃນສາມວັນ.
ເດືອນທີເກົ້າວັນທີຊາວຂອງເດືອນນັ້ນ. ປະຊາຊົນທຸກຄົນກໍຍືນຢູ່ທີ່ນັ້ນຂ້າງຫນ້າພຣະວິຫານຂອງພຣະເຈົ້າ ແລະຕົວສັ່ນເພາະຖ້ອຍຄຳ
ແລະຝົນຕົກຫນັກ.[10]ເອຊະຣາ ປະໂລຫິດໄດ້ລຸກຂຶ້ນ ແລະກ່າວວ່າ, "ພວກເຈົ້າເອງເຮັດການລະເມີດ. ພວກເຈົ້າໄດ້ຢູ່ກັບພວກຜູ້ຍິງ ຕ່າງຊາດ
ທີ່ເປັນການທະວີຄວາມຜິດຂອງອິສະຣາເອນຫລາຍຂຶ້ນ.
[11]ແຕ່ບັດນີ້ຈົ່ງຖວາຍຄຳສັນຣະເສີນແດ່ພຣະຢາເວ, ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກເຈົ້າ, ແລະເຮັດຕາມນ້ຳພຣະທັຍຂອງພຣະອົງ.
ຈົ່ງແຍກຕົວອອກຈາກປະຊາຊົນຂອງແຜ່ນດິນນີ້ ແລະຈາກພວກຜູ້ຍິງຕ່າງຊາດ."
[12]ຊຸມນຸມຊົນທັງຫມົດກໍໄດ້ຕອບດ້ວຍສຽງດັງວ່າ, "ເຮົາຈະເຮັດຕາມທີ່ທ່ານໄດ້ເວົ້າ.[13]ແຕ່ມີປະຊາຊົນຫລວງຫລາຍ, ແລະຕອນນີ້ເປັນຣະດູຝົນ,
ພວກເຮົາບໍ່ມີກຳລັງທີ່ຈະຢືນຢູ່ຂ້າງນອກ, ແລະນີ້ບໍ່ແມ່ນວຽກແຕ່ມື້ສອງມື້, ເພາະເຮົາໄດ້ລະເມີດຢ່າງຮ້າຍແຮງໃນເລື່ອງນີ້.
[14]ດັ່ງນັ້ນຂໍໃຫ້ພວກຫົວຫນ້າຂອງເຮົາເປັນຕົວແທນຂອງຊຸມນຸມຊົນທັງຫມົດ.
ຂໍໃຫ້ທຸກຄົນທີ່ຍອມໃຫ້ພວກຜູ້ຍິງຕ່າງຊາດອາສັຍຢູ່ໃນເມືອງຂອງພວກເຮົາມາໃນເວລາທີ່ກຳນົດນັ້ນ ພ້ອມກັບຜູ້ອາວຸໂສຂອງເມືອງ
ແລະຜູ້ພິພາກສາຂອງເມືອງຈົນກວ່າຄວາມໂກດຮ້າຍອັນຮຸນແຮງຂອງພຣະເຈົ້າຂອງເຮົາຈະໄປຈາກເຮົາ."[15]ໂຢນາທານ ລູກຊາຍ
ຂອງອາສາເຮນ ແລະຢາເຊອີຢາລູກຊາຍຂອງຕິກວາ ໄດ້ຕໍ່ຕ້ານເລື່ອງນີ້, ແລະເມຊຸນລຳແລະຊັບເບທາຍ ຄົນເລວີ
ໄດ້ສະຫນັບສະຫນູນພວກເຂົາ.
[16]ດັ່ງນັ້ນປະຊາຊົນທີ່ໄດ້ກັບມາຈາກການເປັນຊະເລີຍກໍໄດ້ເຮັດດັ່ງນີ້. ເອຊະຣາ ປະໂລຫິດໄດ້ເລືອກຜູ້ຊາຍ, ທີ່ເປັນພວກຜູ້ນຳໃນຕະກູນ,
ແລະເຊື້ອສາຍຂອງບັນພະບຸຣຸດ ພວກເຂົາທຸກຄົນໄດ້ລະບຸຊື່ໄວ້ ແລະພວກເຂົາໄດ້ສືບຄົ້ນເລື່ອງນີ້ ໃນວັນທີຫນຶ່ງຂອງເດືອນທີສິບ.
[17]ພໍຮອດວັນຫນຶ່ງໃນເດືອນທີຫນຶ່ງພວກເຂົາໄດ້ເຊົາການຄົ້ນຫາເລື່ອງທີ່ພວກ ຜູ້ຊາຍໄດ້ອາສັຍຢູ່ກັບຜູ້ຍິງຕ່າງຊາດ.
[18]ໃນພວກເຊື້ອສາຍພວກປະໂລຫິດໄດ້ມີຄົນເຫລົ່ານັ້ນທີ່ອາສັຍຢູ່ພວກຜູ້ຍິງຕ່າງຊາດ. ໃນພວກເຊື້ອສາຍ ເຢຊູອາ ລູກຊາຍໂຢຊາດັກ
ແລະພວກພີ່ນ້ອງຂອງເຂົາມີ ມາອາເສອີຢາ, ເອລີເອເຊ, ຢາຣິບ, ແລະ ເກດາລີຢາ.
[19]ດັ່ງນັ້ນພວກເຂົາຈຶ່ງໄດ້ຕັດສິນໃຈປະບັນດາເມຍຂອງພວກເຂົາ. ເນື່ອງຈາກພວກເຂົາເຮັດຜິດ,
ພວກເຂົາຈຶ່ງໄດ້ຖວາຍແກະໂຕຜູ້ໂຕຫນຶ່ງຈາກຝູງສັດ ສຳລັບຄວາມຜິດຂອງພວກເຂົາ.
[20]ໃນພວກເຊື້ອສາຍອິມເມ ມີ: ຮານານີ ແລະເຊບາດີຢາ.[21]ໃນພວກເຊື້ອສາຍຂອງຮາຣິມ ມີ: ມາອາເສອີຢາ, ເອລີຢາ, ເຊມາອີຢາ, ເຢຮີເອນ,
ແລະ ອູດຊີຢາ.[22]ໃນພວກເຊື້ອສາຍປັດຊູມີ: ເອລີໂອນາຍ, ມາອາເສອີຢາ, ອິດຊະມາເອນ, ເນທາເນນ, ໂຢຊາບັດ, ແລະເອລາສາ.
[23]ໃນພວກເຊື້ອສາຍເລວີມີ: ໂຢຊາບັດ, ຊີເມອີ, ເກລາອີຢາ ນັ້ນກໍຄື ເກລີຕາ, ເປທາຮີຢາ, ຢູດາ,[24]ໃນພວກນັກຮ້ອງມີ: ເອລີອາຊິບ.
ໃນຄົນເຝົ້າປະຕູມີ: ຊານລູມ, ເຕເລັມ, ແລະອູຣີ.[25]ໃນພວກຄົນອິສະຣາເອນທີ່ເຫລືອ ໃນພວກເຊື້ອສາຍ ປາໂຣດມີ: ຣາມີຢາ, ອິດຊີຢາ, ມັນກີຢາ,
ມີຢາມິນ, ເອເລອາຊາ, ມັນກີຢາ, ແລະເບນາອີຢາ.
[26]ໃນພວກເຊື້ອສາຍເອລາມ ມີ: ມັດຕານີຢາ, ເຊກາຣີຢາ, ເຢຮີເອນ, ອັບດີ, ເຢເຣໂມດ, ແລະ ເອລີຢາ.[27]ໃນພວກເຊື້ອສາຍຊັດຕູມີ:
ເອລີໂອນາຍ, ເອລີອາຊິບ, ມັດຕານີຢາ, ເຢເຣໂມດ, ຊາບັດ, ແລະອາຊີຊາ.[28]ໃນພວກເຊື້ອສາຍ ເບບາຍມີ: ເຢໂຮຢານານ, ຮານານີຢາ,
ຊັບບາຍ, ແລະ ອັດໄລ.[29]ໃນພວກເຊື້ອສາຍບານີມີ: ເມຊຸນລຳ, ມັນລຸກ, ອາດາອີຢາ, ຢາຊຸບ, ເຊອານ, ແລະເຢລີໂມດ.
[30]ໃນພວກເຊື້ອສາຍຂອງປາຮາດໂມອາບມີ: ອັດນາ, ເກລານ, ເບນາອີຢາ, ມາອາເສອີຢາ, ມາຕານີຢາ, ເບຊາເລນ, ບິນນູອີ, ແລະມານາເຊ.
[31]ໃນພວກເຊື້ອສາຍຮາຣິມມີ: ເອລີເອເຊ, ອິດຊີຢາ, ມັນກີຢາ, ເຊມາອີຢາ, ຊີເມໂອນ.[32]ເບັນຢາມິນ, ມັນລຸກ, ແລະເຊມາຣີຢາ.
[33]ໃນພວກເຊື້ອສາຍຂອງຮາຊຸມມີ: ມັດເຕໄນ, ມັດຕາຕາ, ຊາບັດ, ເອລີເຟເລັດ, ເຢເຣມາຍ, ມານາເຊ, ແລະຊີເມອີ.[34]ໃນພວກເຊື້ອສາຍບານີ ມີ:
ມາອາດາຍ, ອາຣາມ, ອູເອນ,[35]ເບນາອີຢາ, ເບເດອີຢາ, ເກລູຮີ,[36]ວານີຢາ, ເມເຣໂມດ, ເອລີອາຊິບ,
[37]ມັດຕານີຢາ, ມັດເຕໄນ, ແລະຢາອາສູ,[38]ໃນພວກເຊື້ອສາຍບິນນູອີມີ: ຊີເມອີ,[39]ເຊເລມີຢາ, ນາທານ, ອາດາອີຢາ,[40]ມັກນາເດບາຍ, ຊາຊາຍ,
ຊາລາຍ,

 generated on Tue Jun 17 19:01:42 2025

41ອາຊາເຣນ, ເຊເລມີຢາ, ເຊມາຣີຢາ, 42ຊານລູມ, ອາມາຣີຢາ, ແລະໂຢເຊັບ. 43ໃນພວກເຊື້ອສາຍເນໂບມີ: ເຢອີເອນ, ມັດຕີທີຢາ, ຊາບັດ,
ເຊບີນາ, ອັດໂດ, ໂຢເອນ, ແລະເບນາອີຢາ. 44ຄົນເຫລົ່ານີ້ທັງຫມົດໄດ້ຮັບພວກຜູ້ຍິງຕ່າງຊາດເປັນເມຍແລະມີລູກກັບພວກນາງບາງຄົນ.

# ເນເຫມີຢາ

1 1ນີ້ຄືຖ້ອຍຄຳຂອງເນເຫມີຢາລູກຂອງຮາກາລີຢາ: ບັດນີ້ໄດ້ເກີດຂຶ້ນໃນເດືອນກິດຊະເຫລັບ, ຂອງປີທີຊາວ,
ໃນຂະນະທີ່ຂ້າພະເຈົ້າຢູ່ໃນປ້ອມສຸສາ, 2ມີພີ່ນ້ອງຄົນຫນຶ່ງຂອງຂ້າພະເຈົ້າ, ຄືຮານານີ, ໄດ້ມາກັບນາງຄົນຈາກຢູດາ ແລະ
ຂ້າພະເຈົ້າໄດ້ຖາມເລື່ອງພວກຢິວທີ່ເຫລືອລອດຊີວິດຈາກການເປັນຊະເລີຍ, ແລະຖາມກ່ຽວກັບເລື່ອງເມືອງເຢຣູຊາເລັມ.

3ພວກເຂົາໄດ້ຕອບຂ້າພະເຈົ້າວ່າ, "ຜູ້ທີ່ຢູ່ໃນເມືອງນັ້ນທີ່ລອດຊີວິດຈາກການຕົກເປັນຊະເລີຍ ມີຄວາມລຳບາກ ແລະ
ຄວາມອັບອາຍຫລາຍເພາະກຳແພງເມືອງເຢຣູຊາເລັມໄດ້ຖືກທຳລາຍລົງ, ແລະ ປະຕູຕ່າງໆກໍຖືກໄຟເຜົາ."
4ທັນທີທີ່ຂ້າພະເຈົ້າໄດ້ຍິນຖ້ອຍຄຳເຫລົ່ານີ້, ຂ້າພະເຈົ້າກໍນັ່ງລົງແລ້ວກໍຮ້ອງໄຫ້, ແລະ ຂ້າພະເຈົ້າຍັງໂສກເສົ້າ ແລະ ອົດອາຫານຕໍ່ໄປ ແລະ
ອະທິຖານຕໍ່ຫນ້າອົງພຣະເຈົ້າແຫ່ງຟ້າສະຫວັນຢູ່ອີກຫລາຍມື້. 5ແລ້ວຂ້າພະເຈົ້າຈຶ່ງທູນວ່າ, "ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງຟ້າສະຫວັນ,
ພຣະເຈົ້າຜູ້ຍິ່ງໃຫຍ່, ແລະ ຫນ້າຢຳເກງ, ຜູ້ຊົງຮັກສາພັນທະສັນຍາ ແລະ ມີຄວາມຮັກຫມັ້ນຄົງຕໍ່ບັນດາຜູ້ຮັກພຣະອົງ
ແລະຊົງຮັກສາພຣະບັດຍັດຂອງພຣະອົງ.
6ຂໍພຣະອົງຊົງຟັງຄຳອະທິຖານຂອງຂ້ານ້ອຍ ແລະ ທອດພະເນດ, ຂໍຊົງຟັງຄຳອະທິຖານຂອງຜູ້ຮັບໃຊ້ພຣະອົງຊຶ່ງ
ໃນຂະນະນີ້ຂ້ານ້ອຍອະທິຖານຕໍ່ພຣະອົງທັງກາງເວັນ ແລະກາງຄືນ ເພື່ອປະຊາຊົນຊາວອິດສະຣາເອນຜູ້ຮັບໃຊ້ທັງຫລາຍຂອງພຣະອົງ.
ຂ້ານ້ອຍສາລະພາບບາບຂອງປະຊາຊົນອິດສະຣາເອນ, ຊຶ່ງຂ້ານ້ອຍທັງຫລາຍໄດ້ເຮັດບາບຕໍ່ພຣະອົງ. ທັງຂ້ານ້ອຍ ແລະ
ກັບຕະກູນຂອງຂ້ານ້ອຍທີ່ໄດ້ເຮັດບາບນຳ. 7ພວກຂ້ານ້ອຍທັງຫລາຍໄດ້ປະພຶດການຊົ່ວຮ້າຍຫລາຍຕໍ່ພຣະອົງ, ແລະ
ບໍ່ໄດ້ຮັກສາພຣະບັນຍັດກົດບັນຍັດ, ແລະ ກົດຫມາຍຊຶ່ງພຣະອົງໄດ້ຊົງບັນຊາແກ່ໂມເຊ ຜູ້ຮັບໃຊ້ຂອງພຣະອົງໄວ້.
8ຂໍພຣະອົງຊົງລະລຶກເຖິງພຣະບັນຍັດ ຊຶ່ງໄດ້ຊົງບັນຊາແກ່ໂມເຊຜູ້ຮັບໃຊ້ຂອງພຣະອົງວ່າ, "ຖ້າພວກເຈົ້າບໍ່ຊື່ຕົງຕໍ່ເຮົາ,
ເຮົາຈະກະແຈກກະຈາຍພວກເຈົ້າອອກໄປຢູ່ທ່າມກາງຊົນຊາດທັງຫລາຍ, 9ຖ້າພວກເຈົ້າກັບມາຫາເຮົາ ແລະ ຮັກສາ ແລະ
ປະພຶດຕາມພຣະບັນຍັດຂອງເຮົາ, ເຖິງວ່າພວກເຈົ້າຈະກະຈັດກະຈາຍໄປໄກສຸດປາຍຟ້າ, ເຮົາກໍຈະລວບລວມພວກເຈົ້າມາຈາກທີ່ນັ້ນ
ແລະນຳພວກເຈົ້າມາຍັງສະຖານທີ ຊຶ່ງເຮົາໄດ້ຊົງເລືອກໄວ້ ເພື່ອເຮັດໃຫ້ນາມຂອງເຮົາດຳລົງຢູ່ທີ່ນັ້ນ."
10ບັດນີ້ພວກເຂົາເປັນຜູ້ຮັບໃຊ້ ແລະເປັນປະຊາຊົນຂອງພຣະອົງ, ຜູ້ຊຶ່ງພຣະອົງໄດ້ຊົງໄຖ່ໄວ້ດ້ວຍຣິດທານຸພາບຍິ່ງໃຫຍ່ຂອງພຣະອົງ
ແລະດ້ວຍພຣະຫັດອັນຊົງຣິດຂອງພຣະອົງ. 11ຂ້າແດ່ພຣະຢາເວ, ໂຜດຊົງຟັງຄຳອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ ແລະ
ຄຳອະທິຖານຂອງບັນດາຜູ້ຮັບໃຊ້ຂອງພຣະອົງຜູ້ຍິນດີທີ່ຈະຖວາຍກຽດແດ່ພຣະນາມຂອງພຣະອົງ.
ບັດນີ້ຂໍປະທານຄວາມສຳເລັດໃຫ້ແກ່ຜູ້ຮັບໃຊ້ພຣະອົງໃນວັນນີ້, ແລະ ຂໍຊົງປະທານພຣະເມດຕາແກ່ເຂົາຕໍ່ຫນ້າຕໍ່ຕາຊາຍຄົນນີ້ເຖີດ."
ຂ້ານ້ອຍໄດ້ຮັບໃຊ້ກະສັດໃນຖານະຜາຍເຫລົ້າອະງຸ່ນໃຫ້ແກ່ກະສັດ.

2 [1]ໃນເດືອນຂອງນິຊານ, ໃນປີທີຊາວຂອງກະສັດ ອາກຕາເຊເຊັດ, ພະອົງໄດ້ຊົງເລືອກເຫລົ້າອະງຸ່ນ, ແລະ
ຂ້ານ້ອຍໄດ້ນຳເຫລົ້າອະງຸ່ນນັ້ນມາຖວາຍແກ່ກະສັດ. ເວລານີ້ຂ້ານ້ອຍ ບໍ່ເຄີຍສະແດງຄວາມໂສກເສົ້າ ຕໍ່ຫນ້າຂອງພະອົງມາກ່ອນ.
[2]ແຕ່ກະສັດຖາມຂ້ານ້ອຍວ່າ "ເປັນຫຍັງໃບຫນ້າຂອງເຈົ້າຈຶ່ງເບິ່ງຄືເສົ້າຫມອງເຫັ່ນໍ? ເຈົ້າບໍ່ໄດ້ເຈັບປ່ວຍອີຫຍັງ.
ນີ້ຕ້ອງເປັນຄວາມໂສກເສົ້າທີ່ມາຈາກຫົວໃຈ." ຂ້ານ້ອຍຈຶ່ງມີຄວາມຢ້ານກົວຫລາຍ.

[3]ຂ້ານ້ອຍໄດ້ທູນຕໍ່ກະສັດວ່າ, "ຂໍກະສັດຈົ່ງຊົງພະຊົນອາຍຸຍືນຍາວນານຕະຫລອດໄປ!
ເພາະເຫດໃດໃບຫນ້າຂອງຂ້ານ້ອຍຈຶ່ງບໍ່ຄວນເສົ້າຫມອງ? ນັ້ນເປັນເພາະເມືອງ, ອັນເປັນທີ່ຝັງສົບຂອງບັນດາບັນພະບູລຸດຂອງຂ້ານ້ອຍ,
ຖືກທຳລາຍ ແລະ ປະຕູເມືອງກໍຖືກໄຟເຜົາຈົນຫມົດ.
[4]ແລ້ວກະສັດຈຶ່ງກ່າວແກ່ຂ້ານ້ອຍວ່າ, "ເຈົ້າຕ້ອງການໃຫ້ເຮົາເຮັດສິ່ງໃດ?" ດັ່ງນັ້ນຂ້ານ້ອຍຈຶ່ງອະທິຖານຕໍ່ພຣະເຈົ້າແຫ່ງຟ້າສະຫວັນ.
[5]ຂ້ານ້ອຍທູນຕອບກະສັດວ່າ, "ຖ້າຫາກສິ່ງນີ້ເປັນທີ່ພໍພຣະໄທຂອງພະອົງ, ແລະ
ຖ້າຫາກຜູ້ຮັບໃຊ້ຂອງພະອົງໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍຕາຂອງພຣະອົງ, ຂໍຊົງສົ່ງຂ້ານ້ອຍໄປຍັງຢູດາຍ,
ຄືເມືອງອັນເປັນສະຖານທີ່ຝັງສົບຂອງບັນດາບັນພະບູລຸດຂອງຂ້ານ້ອຍ, ເພື່ອຂ້ານ້ອຍຈະສ້າງມັນຂຶ້ນມາໃຫມ່."[6]ກະສັດຕອບຂ້ານ້ອຍວ່າ
(ແລະພະຣາຊີນີຊົງປະທັບຄຽງພະອົງ), "ເຈົ້າຈະໄປດົນປານໃດ ແລະມື້ໃດທີ່ເຈົ້າຈະກັບມາ?" ກະສັດຊົງຍິນດີທີ່ຈະສົ່ງຂ້ານ້ອຍໄປ
ເມື່ອຂ້ານ້ອຍໄດ້ໃຫ້ວັນກຳນົດເດີນທາງແກ່ພະອົງ.
[7]ແລ້ວຂ້ານ້ອຍຈຶ່ງທູນຕໍ່ກະສັດວ່າ, "ຖ້າຫາກສິ່ງນີ້ເປັນທີ່ພໍໃຈຂອງພະອົງ,
ຂໍຊົງປະທານຈົດຫມາຍແກ່ຂ້ານ້ອຍເພື່ອນຳໄປມອບໃຫ້ແກ່ບັນດາຜູ້ປົກຄອງແຂວງ
ທາງພາກຕາເວັນຕົກຂອງແມ່ນ້ຳເອີຟຣັດເພື່ອພວກເຂົາຈະອະນຸຍາດໃຫ້ຂ້ານ້ອຍຜ່ານເຂດແດນຂອງພວກເຂົາໄປຍັງຢູດາຍໄດ້.
[8]ຂໍພະອົງຊົງປະທານຈົດຫມາຍ ໄປຍັງອາສັບຜູ້ເບິ່ງແຍງປ່າໄມ້ຫລວງຂອງກະສັດ, ເພື່ອເຂົາຈະມອບໄມ້ໃຫ້ແກ່ຂ້ານ້ອຍ
ໃນການແປງຄານປະຕູປ້ອມປາການໃກ້ພຣະວິຫານ, ແລະ ແປງກຳແພງເມືອງ ແລະ ສ້າງບ້ານທີ່ຂ້ານ້ອຍຈະອາໄສຢູ່ນັ້ນ,"
ເພາະພຣະຫັດອັນປະເສີດຂອງພຣະເຈົ້າຂອງຂ້ານ້ອຍຊົງຢູ່ເຫນືອຂ້ານ້ອຍ, ດັ່ງນັ້ນກະສັດຈຶ່ງຍິນຍອມເຮັດຕາມຄຳຂໍຮ້ອງຕ່າງໆ ຂອງຂ້ານ້ອຍ.
[9]ຂ້ານ້ອຍມາພົບກັບຜູ້ປົກຄອງ ຢູ່ອີກຟາກຫນຶ່ງຂອງແມ່ນ້ຳ ແລະ ຂ້ານ້ອຍໄດ້ມອບຈົດຫມາຍຂອງກະສັດແກ່ພວກເຂົາ.
ບັດນີ້ກະສັດໄດ້ສົ່ງນາຍທະຫານ ແລະ ກອງທະຫານມ້າມາກັບຂ້ານ້ອຍນຳ.[10]ເມື່ອສານບັນລັດຊາວໂຮໂຣນ ແລະ
ໂຕບີຢາຄົນຫນຶ່ງຂອງຊາວອຳໂມນໄດ້ຍິນເລື່ອງນີ້, ພວກເຂົາບໍ່ພໍໃຈຫລາຍ
ທີ່ມີໃຜບາງຄົນມາຊອກຫາຫົນທາງເພື່ອຊ່ວຍເຫລືອປະຊາຊົນຂອງອິດສະຣາເອນ.
[11]ດັ່ງນັ້ນຂ້ານ້ອຍຈຶ່ງເດີນທາງມາຮອດເຢຣູຊາເລັມ ແລະ ໄດ້ພັກອາໄສຢູ່ທີ່ນັ້ນເປັນເວລາສາມວັນ.[12]ຂ້ານ້ອຍລຸກຂຶ້ນໃນເວລາກາງຄືນ, ຂ້ານ້ອຍ
ກັບຊາຍບາງຄົນທີ່ມາກັບຂ້ານ້ອຍ. ຂ້ານ້ອຍບໍ່ໄດ້ບອກໃຜເຖິງສິ່ງທີ່ພຣະເຈົ້າຊົງບັນດານໃຈຂ້ານ້ອຍເຮັດເພື່ອເຢຣູຊາເລັມ.
ຂ້ານ້ອຍບໍ່ໄດ້ນຳສັດແມ່ນແຕ່ໂຕດຽວມາກັບຂ້ານ້ອຍ, ຍົກເວັ້ນສັດແຕ່ສັດທີ່ຂ້ານ້ອຍຂີ່ຢູ່ນັ້ນ.
[13]ໃນເວລາກາງຄືນ ຂ້ານ້ອຍຈຶ່ງໄດ້ອອກໄປທາງປະຕູຮ່ອມພູ, ໄປຈົນເຖິງບໍ່ນ້ຳພຸໂຕມັງກອນ ແລະ ຈົນໄປຮອດຮ່ອມພູປະຕູຂີ້ສັດ, ແລະ
ໄດ້ກວດສອບກຳແພງເມືອງເຢຣູຊາເລັມ, ທີ່ພັງເພ ແລະ ກວດປະຕູໄມ້ທີ່ຖືກໄຟເຜົາຈົນໃຫມ້.[14]ແລ້ວຂ້ານ້ອຍຈຶ່ງໄປທີ່ປະຕູນ້ຳພຸ
ຈົນຮອດສະນ້ຳໃຫຍ່ຂອງກະສັດ. ສະຖານທີ່ແຫ່ງນັ້ນແຄບເກີນກວ່າທີ່ສັດໂຕທີ່ຂ້ານ້ອຍຂີ່ຢູ່ນັ້ນຈະຜ່ານໄປໄດ້.
[15]ໃນຄືນນັ້ນຂ້ານ້ອຍຈຶ່ງຂຶ້ນໄປເທິງຮ່ອມພູ ແລະ ກວດເບິ່ງກຳແພງເມືອງ, ແລະ ຂ້ານ້ອຍຈຶ່ງກັບໄປເຂົ້າທາງປະຕູຮ່ອມພູຄືເກົ່າ.
[16]ພວກຜູ້ປົກຄອງບໍ່ຮູ້ວ່າຂ້ານ້ອຍໄປບ່ອນໃດ ຫລືໄປເຮັດຫຍັງ, ແລະ ຂ້ານ້ອນຍັງບໍ່ໄດ້ບອກເລື່ອງນີ້ແກ່ຊາວຢິວທັງຫລາຍ,
ບໍ່ໄດ້ບອກພວກປະໂຣຫິດ, ບໍ່ໄດ້ບອກແກ່ພວກຊຸນນາງ, ພວກຜູ້ປົກຄອງ ແລະບໍ່ໄດ້ບອກແກ່ຄົນທີ່ເຫລືອຢູ່ຜູ້ຈະເຮັດວຽກ.
[17]ຂ້ານ້ອຍເວົ້າກັບພວກເຂົາວ່າ, "ພວກທ່ານເຫັນຄວາມທຸກໃຈທີ່ຢູ່ພາຍໃນພວກເຮົາແລ້ວ ແລະ ຄືເລື່ອງທີ່ເຢຣູຊາເລັມຖືກທຳລາຍແລະ
ປະຕູເມືອງກໍຖືກໄຟເຜົາຈົນຫມົດ. ມາເທີນ ໃຫ້ພວກເຮົາສ້າງກຳແພງເຢຣູຊາເລັມຂຶ້ນມາໃຫມ່,
ເພື່ອພວກເຮົາຈະບໍ່ຕ້ອງອັບອາຍຂາຍຫນ້າອີກຕໍ່ໄປ."[18]ຂ້ານ້ອຍບອກແກ່ພວກເຂົາວ່າພຣະຫັດອັນປະເສີດຂອງພຣະເຈົ້າຂອງຂ້ານ້ອຍນັ້ນຢູ່ເຫນືອຂ້ານ້ອຍ
ແລະ ບອກເຖິງຖ້ອຍຄຳຂອງກະສັດທີ່ກ່າວແກ່ຂ້ານ້ອຍ. ພວກເຂົາເວົ້າວ່າ, "ໃຫ້ເຮົາລຸກຂຶ້ນ ແລະສ້າງຮ່ວມກັນເທີນ."
ດັ່ງນັ້ນພວກເຂົາຈຶ່ງໄດ້ໄປເສີມກຳລັງມືຂອງພວກເຂົາໃຫ້ເຂັ້ມແຂງເພື່ອເຮັດການດີນີ້.
[19]ແຕ່ເມື່ອສານບັນລັດຊາວໂຮໂຣນ, ກັບໂຕບີຢາຊາວອຳໂມນ, ແລະ ເກເຊມຊາວອາຣັບໄດ້ຍິນເລື່ອງນີ້, ພວກເຂົາໄດ້ເຢາະເຢີ້ຍ ແລະ
ປະຫມາດພວກເຮົາ, ແລະພວກເຂົາເວົ້າວ່າ, "ພວກເຈົ້າກຳລັງເຮັດຫຍັງກັນນໍ?
ພວກເຈົ້າກຳລັງກະບົດຕໍ່ກະສັດແມ່ນບໍ?"[20]ແລ້ວຂ້ານ້ອຍຕອບພວກເຂົາວ່າ,
"ພຣະເຈົ້າແຫ່ງຟ້າສະຫວັນຈະປະທານຄວາມສຳເລັດໃຫ້ແກ່ພວກເຮົາ. ພວກເຮົາເປັນຜູ້ຮັບໃຊ້ຂອງພຣະອົງ ແລະ ພວກເຮົາຈະລຸກຂຶ້ນ
ແລະສ້າງ. ແຕ່ພວກເຈົ້າຈະບໍ່ມີສິດ, ບໍ່ມີສ່ວນ ແລະ ບໍ່ໄດ້ຮັບການລະລຶກເຖິງໃນເຢຣູຊາເລັມ."

 generated on Tue Jun 17 19:01:42 2025

3 1 ແລ້ວເອລີອາຊິບ ກັບມະຫາປະໂຣຫິດໄດ້ລຸກຂຶ້ນພ້ອມກັບເຫລົ່າພີ່ນ້ອງປະໂຣຫິດຂອງເຂົາ, ແລະ ພວກເຂົາໄດ້ສ້າງປະຕູແກະ.
ພວກເຂົາໄດ້ເຮັດພິທີຊໍາລະໃຫ້ບໍຣິສຸດ ແລະຕັ້ງປະຕູໃຫ້ເຂົ້າທີ່. ພວກເຂົາໄດ້ເຮັດພິທີຊໍາລະໃຫ້ບໍຣິສຸດໄປໄກຮອດຫໍຄອຍຫນຶ່ງຮ້ອຍ ແລະ
ຫໍຄອຍຂອງຮານາເນນ. 2 ຕໍ່ຈາກເຂົາກໍແມ່ນຄົນເຢຣີໂກໄດ້ເຮັດວຽກໃຫ້, ແລະ ຕໍ່ຈາກພວກເຂົາແມ່ນ ຊັກກູເຣລູກຂອງອິມຣີໄດ້ເຮັດວຽກໃຫ້.

3 ລູກທັງຫລາຍຂອງຮັດເສນາຢາ ໄດ້ສ້າງປະຕູປາ. ພວກເຂົາໄດ້ເຮັດວົງກົບ, ແລະ ຕິດຕັ້ງປະຕູ, ໃສ່ບານປະຕູ, ແລະ ໃຊ້ເຫລັກແທ່ງເປັນໄລຄັດ.
4 ເມເຣໂມດໄດ້ສ້າງສ່ວນຕໍ່ໄປ. ເຂົາເປັນລູກຂອງອຸຣີຢາ ຜູ້ເປັນລູກຂອງຮັກກົກໄດ້ສ້າງສ່ວນຕໍ່ໄປ. ເມຊຸນລຳໄດ້ສ້າງສ່ວນຕໍ່ໄປ
ເຂົາເປັນລູກຂອງເບເຣກີຢາ. ຜູ້ເປັນລູກຂອງເມເຊຊາເບນໄດ້ສ້າງສ່ວນຕໍ່ໄປຊາດົກໄດ້ສ້າງສ່ວນຕໍ່ໄປ ເຂົາເປັນລູກຂອງບາອານາ.
5 ຕໍ່ຈາກພວກເຂົາມາ ຄົນເຕໂກົວໄດ້ສ້າງສ່ວນຕໍ່ໄປ ແຕ່ຜູ້ນໍາຂອງພວກເຂົາປະຕິເສດບໍ່ຍອມເຮັດວຽກພາຍໃຕ້ຜູ້ຄວບຄຸມດູແລສໍາລັບພວກເຂົາ.
6 ໂຢອີອາດາລູກຂອງປາເສຢາ ແລະ ເມຊຸນລຳລູກຊາຍຂອງເບໂສເດອີຢາໄດ້ແປງປະຕູເກົ່າ. ພວກເຂົາໄດ້ເຮັດວົງກົບ, ແລະ
ໄດ້ຕິດຕັ້ງປະຕູໃສ່ບານປະຕູ, ແລະ ໃຊ້ເຫລັກແທງເປັນໄລຄັດ. 7 ຕໍ່ຈາກພວກເຂົາເມລາຕີຢາຊາວກິເບໂອນ ແລະຢາໂດນຊາວເມໂຣໂນດ,
ຜູ້ເປັນຄົນມາຈາກກິເບໂອນ ແລະມິຊະປາ, ໄດ້ແປງສ່ວນທີ່ເປັນທີ່ຢູ່ອາໄສຂອງເຈົ້າເມືອງເຫນືອແມ່ນ້ຳຂຶ້ນໄປ.
8 ຕໍ່ເຂົາມາ ອຸດຊີເອນລູກຊາຍຂອງຮາກຮາອີຢາ, ຄົນຫນຶ່ງໃນຊ່າງຕີຄໍາໄດ້ສ້າງສ່ວນຕໍ່ໄປ, ແລະຕໍ່ເຂົາມາເປັນຮານານີຢາ, ເປັນຜູ້ປຸງນ້ຳຫອມ.
ພວກເຂົາໄດ້ສ້ອມແປງເຢຣູຊາເລັມຂຶ້ນມາໃຫມ່ຍາວໄປຈົນຮອດປະຕູກໍາແພງກວ້າງ. 9 ຕໍ່ພວກເຂົາມາ ເຣຟາອີຢາລູກຂອງຮູເຣໄດ້ສ້າງສ່ວນຕໍ່ໄປ.
ເຂົາເປັນຜູ້ປົກຄອງເຄິ່ງຫນຶ່ງຂອງແຂວງຫນຶ່ງຂອງເຢຣູຊາເລັມ. 10 ຕໍ່ພວກເຂົາມາ
ເຢດາອີຢາລູກຂອງຮາຣູແມບໄດ້ສ້າງສ່ວນຕໍ່ຈາກບ້ານຂອງເຂົາໄປ. ຕໍ່ຈາກເຂົາຮັດຕຸຊະລູກຂອງຮາຊັບເນອີຢາໄດ້ສ້າງສ່ວນຕໍ່ໄປ.
11 ມັນກີຢາລູກຂອງຮາຣິມ ແລະ ຮາຊຸບລູກຂອງປາຮາດໂມອາບ ໄດ້ສ້າງສ່ວນຕໍ່ໄປພ້ອມກັບຫໍຄອຍເຕົາອົບ.
12 ຕໍ່ຈາກພວກເຂົາຊານລູມລູກຂອງຮັນໂລເຮັດ
ຜູ້ປົກຄອງເຄິ່ງຫນຶ່ງຂອງແຂວງຫນຶ່ງຂອງເຢຣູຊາເລັມໄດ້ສ້ອມແປງພ້ອມກັບລູກຍິງທັງຫລາຍຂອງເຂົາ.
13 ຮານູນ ແລະ ຜູ້ອາໄສໃນເມືອງຊາໂນອາໄດ້ສ້ອມແປງປະຕູຮ່ອມພູ. ພວກເຂົາໄດ້ສ້າງຂຶ້ນໃຫມ່ ແລະ ຕິດຕັ້ງປະຕູ.
ໃສ່ບານປະຕູໃສ່ເຫລັກແທ່ງເປັນໄລຄັດ. ພວກເຂົາໄດ້ສ້ອມແປງໄປໄກຮອດຫນຶ່ງພັນສອກຈົນຮອດປະຕູກອງຂີ້ເຫຍື້ອ.
14 ມັນກີຢາລູກຂອງເຣກາບ, ຜູ້ປົກຄອງເຂດເບັດຮັກເກເຣັມ, ໄດ້ສ້ອມແປງປະຕູບ່ອນຖອກກອງຂີ້ເຫຍື້ອເຂົາໄດ້ສ້າງຂຶ້ນ ແລະ
ຕິດຕັ້ງປະຕູຂຶ້ນຢູ່ໃນບ່ອນຂອງມັນ, ພ້ອມທັງໃສ່ເຫລັກແທ່ງເປັນໄລຄັດ. 15 ຊານລູມລູກຂອງໂກນໂຮເຊ, ຜູ້ປົກຄອງແຂວງມິຊະປາ,
ໄດ້ສ້າງປະຕູນ້ຳພຸຂຶ້ນໃຫມ່, ເຂົາສ້າງມັນຂຶ້ນ, ຕິດຕັ້ງປະຕູ, ໃສ່ປະຕູໃນບ່ອນຂອງມັນ, ພ້ອມທັງໃຊ້ເຫລັກແທ່ງເປັນໄລຄັດ.
ເຂົາສ້າງກໍາແພງຂອງເຊລາທີ່ຕິດກັບສວນຂຶ້ນມາໃຫມ່ອີກ, ໄປໄກຈົນຮອດຄັນໃດລົງໄປເຖິງເມືອງຂອງດາວິດ.
16 ເນເຫມີຢາລູກຂອງອາຊາບຸກ, ຜູ້ປົກຄອງແຂວງເບັດຊູເຣເຄິ່ງຫນຶ່ງໄດ້ສ້ອມແປງໄປຈົນຮອດບ່ອນກົງກັນຂ້າມອູບໂມງຝັງສົບຂອງດາວິດ,
ໄປຈົນຮອດສະນ້ຳທີ່ຄົນຂຸດຂຶ້ນມາ, ແລະ ຍາວໄປຈົນຮອດຄ້າຍຂອງນັກຮົບ. 17 ຕໍ່ຈາກເຂົາ ຄົນເລວີໄດ້ສ້ອມແປງ,
ລວມໄປຮອດເຣຮຸມລູກຂອງບານີ ແລະ ຕໍ່ຈາກເຂົາ, ຮັດຊາບີຢາ, ຜູ້ປົກຄອງແຂວງເກອີລາເຄິ່ງຫນຶ່ງ, ໄດ້ສ້ອມແປງໃນແຂວງຂອງຕົນເອງ.
18 ຕໍ່ຈາກເຂົາຊາວເມືອງຂອງເຂົາໄດ້ສ້ອມແປງ, ລວມເຖິງບາໄວລູກຊາຍຂອງເຮນາດາດ, ຜູ້ປົກຄອງແຂວງເກອີລາເຄິ່ງຫນຶ່ງ. 19 ຕໍ່ຈາກເຂົາໄປ,
ເອເຊລູກຊາຍຂອງເຢຊູອາ, ຜູ້ປົກຄອງເມືອງມິຊະປາ, ໄດ້ສ້ອມແປງອີກສ່ວນຫນຶ່ງທີ່ຢູ່ດ້ານຫນ້າທາງຂຶ້ນໄປສາງໄວ້ອາວຸດບ່ອນຫົວມຸມກໍາແພງ.
20 ຕໍ່ຈາກເຂົາ ບາຣຸກລູກຂອງຊັບບາຍໄດ້ທຸ້ມເທໃນການສ້ອມແປງອີກສ່ວນຫນຶ່ງ,
ຈາກຫົວມຸມຂອງກໍາແພງຈົນໄປຮອດປະຕູບ້ານຂອງເອເລອາຊິບມະຫາປະໂຣຫິດ. 21 ຕໍ່ຈາກເຂົາເມເຣໂມດລູກຂອງອູຣີຢາ ຜູ້ເປັນລູກຂອງຮັກກົກ
ໄດ້ສ້ອມແປງ ອີກສ່ວນຫນຶ່ງ, ຈາກປະຕູບ້ານຂອງເອລີອາຊິບໄປຈົນຮອດທ້າຍບ້ານຂອງເອເລອາຊິບ.
22 ຕໍ່ຈາກເຂົາ ບັນດາປະໂຣຫິດທັງຫລາຍ, ຄົນທີ່ມາຈາກພື້ນທີ່ອ້ອມໆເຢຣູຊາເລັມ, ໄດ້ສ້ອມແປງຕໍ່ຈາກພວກເຂົາ. 23 ເບັນຢາມິນ
ແລະຮັດຊຸບໄດ້ສ້ອມແປງກົງກັນຂ້າມກັບບ້ານຂອງພວກເຂົາ. ຕໍ່ຈາກພວກເຂົາອາຊາຣີຢາ ລູກຂອງມາອາເສອີຢາ
ຜູ້ເປັນຫລານຊາຍຂອງອານານີຢາໄດ້ສ້ອມແປງຕໍ່ຈາກບ້ານຂອງເຂົາໄປ. 24 ຕໍ່ຈາກເຂົາບິນນູອີລູກຂອງເຮນາດາດໄດ້ສ້ອມແປງອີກສ່ວນຫນຶ່ງ,
ຈາກບ້ານຂອງອາຊາຣີຢາໄປຈົນຮອດຫົວມຸມກໍາແພງ.
25 ປາລານລູກຂອງອູໄຊໄດ້ສ້ອມແປງສ່ວນທີ່ກົງກັນຂ້າມກັບຫົວມຸມກໍາແພງ ແລະຫໍຄອຍທີ່ຍື່ນອອກມາຊັ້ນເທິງຂອງວັງ ແລະ
ໃກ້ກັບເດີ່ນຫຍ້າຂອງທະຫານຮັກສາພະອົງ. ຕໍ່ຈາກເຂົາເປດາອີຢາລູກຂອງປາໂຣດໄດ້ສ້ອມແປງສ່ວນຕໍ່ໄປ.
26 ບັດນີ້ຜູ້ຮັບໃຊ້ໃນພຣະວິຫານທີ່ອາໄສຢູ່ໃນໂອເຟນໄດ້ຊ້ອມແປງໄປຈົນຮອດຈຸດທີ່ກົງກັນຂ້າມກັບປະຕູນ້ຳ ທາງທິດຕາເວັນອອກແລະ
ຫໍຄອຍທີ່ຍື່ນອອກມາ. 27 ຕໍ່ຈາກເຂົາຊາວເຕໂກົວໄດ້ສ້ອມແປງອີກສ່ວນຫນຶ່ງທີ່ຢູ່ກົງກັນຂ້າມຫໍຄອຍໃຫຍ່
ທີ່ຍື່ນອອກມາໄປໄກຈົນຮອດກໍາແພງໂອເຟນ.
28 ບັນດາປະໂຣຫິດທັງຫລາຍໄດ້ສ້ອມແປງທາງດ້ານເຫນືອປະຕູມ້າຂຶ້ນໄປແຕ່ລະຄົນກໍສ້ອມແປງທີ່ກົງກັນຂ້າມບ້ານຂອງໂຕເອງ.
29 ຕໍ່ຈາກພວກເຂົາຊາດົກ ລູກຂອງອິມເມໄດ້ສ້ອມແປງສ່ວນທີ່ກົງກັນຂ້າມບ້ານຂອງເຂົາເອງ. ແລ້ວຕໍ່ຈາກເຂາເຊມາອີຢາ ລູກຂອງເຊການີຢາ
ຊຶ່ງເປັນຜູ້ເຝົ້າປະຕູຕະເວັນອອກ, ໄດ້ເຮັດການສ້ອມແປງ. 30 ຕໍ່ຈາກເຂົາຮານານີຢາລູກຂອງເຊເລມີຢາ, ແລະ ຮານູນລູກຄົນທີຫົກຂອງຊາລາບ
ໄດ້ສ້ອມແປງ ອີກສ່ວນຫນຶ່ງ. ຕໍ່ຈາກເຂົາເມຊຸນລໍາລູກຂອງເບເຣກີຢາໄດ້ສ້ອມແປງກົງກັນຂ້າມກັບທີ່ພັກຂອງເຂົາ.
31 ຕໍ່ຈາກເຂົາ, ມັນກີຢາເປັນຄົນຫນຶ່ງໃນຊ່າງຕີຄໍາ, ໄດ້ສ້ອມແປງໄປຈົນຮອດບ້ານຂອງຜູ້ຮັບໃຊ້ໃນພຣະວິຫານ ແລະ ຂອງພວກພໍ່ຄ້າ
ທີ່ກົງກັນຂ້າມປະຕູກວດຄົນ ແລະ ທີ່ພັກຊັ້ນເທິງບ່ອນຫົວມຸມ. 32 ບັນດາຊ່າງຕີຄໍາ
ແລະພວກພໍ່ຄ້າໄດ້ສ້ອມແປງລະຫວ່າງຫ້ອງຊັ້ນເທິງບ່ອນຫົວມຸມກັບປະຕູແກະ.

4 1ເມື່ອສານບັນລັດໄດ້ຍິນວ່າ ພວກເຮົາກຳລັງກໍ່ສ້າງກຳແພງ, ເລື່ອງນີ້ເຮັດໃຫ້ເຂົາໃຈຮ້ອນ ແລະ ເຂົາກໍໃຈຮ້າຍຫລາຍ, ແລະ
ເຂົາກໍເຢາະເຍີ້ຍພວກຢິວ. 2ເມື່ອຢູ່ຕໍ່ຫນ້າພວກພີ່ນ້ອງຂອງເຂົາ ແລະກອງທັບຂອງຊາມາເຣຍ, ເຂົາກ່າວວ່າ,
"ພວກຢິວທີ່ອ່ອນແອເຫລົ່ານີ້ກຳລັງເຮັດຫຍັງກັນ? ພວກເຂົາຈະສ້ອມແປງເມືອງນັ້ນເພື່ອຕົວເອງບໍ? ພວກເຂົາຈະຖວາຍເຄື່ອງບູຊາບໍ?
ພວກເຂົາຈະເຮັດວຽກໃຫ້ແລ້ວພາຍໃນມື້ດຽວບໍ? ພວກເຂົາຈະເອົາກ້ອນຫີນທີ່ຖືກໄຟເຜົາຈາກກອງຂີ້ເຫຍື້ອມາໃຊ້ອີກບໍ?
3ໂຕບີຄົນອຳໂມນຢູ່ກັບເຂົາ ແລະ ເຂົາບອກວ່າ, "ຖ້າມີຫມາໄນໂຕຫນຶ່ງຂຶ້ນໄປເທິງສິ່ງທີ່ເຂົາກຳລັງສ້າງຢູ່ນັ້ນ,
ມັນກໍຈະພັງກຳແພງຫີນຂອງພວກເຂົາລົງມາ!"

4ຂ້າແດ່ພຣະເຈົ້າ, ຂອງພວກຂ້ານ້ອຍທັງຫລາຍ. ຂໍຊົງຟັງ ເພາະເຮົາຖືກດູຖູກ ແລະ
ຂໍໃຫ້ຄຳເຢາະເຍີ້ຍຂອງພວກເຂົາກັບໄປຕົກທີ່ຫົວຂອງພວກເຂົາເອງ ແລະ
ຂໍຊົງມອບພວກເຂົາໄວ້ໃຫ້ຖືກປຸ້ນໃນແຜ່ນດິນທີ່ພວກເຂົາເປັນນັກໂທດຢູ່ນັ້ນ. 5ຂໍຢ່າຊົງປົກປິດຄວາມຜິດບາບຂອງພວກເຂົາໄວ້ ແລະ
ຂໍຢ່າຊົງລຶບລ້າງຄວາມບາບຂອງພວກເຂົາຈາກພຣະພັກພຣະອົງ, ເພາະພວກເຂົາໄດ້ຫມິ່ນປະຫມາດພວກຄົນກໍ່ສ້າງໃຫ້ໃຈຮ້າຍ 6ດັ່ງນັ້ນ
ພວກເຮົາຈຶ່ງສ້າງກຳແພງ ແລະ ກຳແພງທັງຫມົດກໍຕໍ່ກັນສູງເຄິ່ງຫນຶ່ງຂອງຄວາມສູງຂອງກຳແພງແລ້ວ,
ເພາະປະຊາຊົນມີຄວາມປາຖະຫນາທີ່ຈະເຮັດວຽກ.
7ເມື່ອສັນບັນລັດ, ໂຕບີຢາ, ຄົນອາຣັບ, ຄົນອຳໂມນ, ແລະຄົນອາຊະໂດດ ໄດ້ຍິນວ່າການສ້ອມແປງກຳແພງເຢຣູຊາເລັມກຳລັງຄືບຫນ້າໄປ, ແລະ
ມີການອຸດຕັນປ່ອງທີ່ມີຮອຍແຕກຂອງກຳແພງແລ້ວ, ພວກເຂົາກໍໃຈຮ້າຍຂຶ້ນອີກ. 8ພວກເຂົາທຸກຄົນຈຶ່ງມີການວາງແຜນຮ້າຍ
ແລະພວກເຂົາກໍເຂົ້າມາສູ້ຮົບກັບເຢຣູຊາເລັມ ແລະ ເຮັດໃຫ້ເກີດຄວາມສັບສົນວຸ້ນວາຍໃນເມືອງນັ້ນ.
9ແຕ່ເຮົາໄດ້ອະທິຖານຕໍ່ພຣະເຈົ້າຂອງເຮົາແລະ ວາງຍາມເພື່ອປ້ອງກັນພວກເຂົາທັງຫລາຍທັງກາງເວັນ
ແລະກາງຄືນເພາະເຫດການຄຸກຄາມຂອງພວກເຂົາ.
10ແລ້ວຄົນຢູດາຍກ່າວວ່າ, "ກຳລັງເຫື່ອແຮງຂອງຄົນທີ່ຂົນເຄື່ອງກໍກຳລັງລົດຫນ້ອຍຖອຍລົງ. ມີເສດຫີນຢູ່ຫລາຍເຫລືອເກີນ, ແລະ
ເຮົາບໍ່ສາມາດກໍ່ສ້າງກຳແພງໄດ້." 11ພວກສັດຕູຂອງເຮົາກ່າວວ່າ, "ພວກເຂົາຈະບໍ່ຮູ້ ແລະບໍ່ເຫັນ ຈົນກ່ວາເຮົາຈະເຂົ້າມາທ່າມກາງພວກເຂົາ
ແລະຂ້າພວກເຂົາ, ແລະ ຢຸດວຽກທັງຫມົດ."
12ໃນເວລານັ້ນ ພວກຢິວທີ່ອາໄສຢູ່ໃກ້ພວກເຂົາກໍມາຈາກທຸກທິດທຸກທາງ ແລະ ບອກກັບເຮົາເປັນສິບຄັ້ງ,
ເຕືອນເຮົາກ່ຽວກັບແຜນການທີ່ພວກເຂົາກຳລັງເຮັດກັບເຮົາຢູ່. 13ດັ່ງນັ້ນ
ຂ້າພະເຈົ້າຈຶ່ງກຳນົດໃຫ້ປະຊາຊົນທີ່ຢູ່ສ່ວນທີ່ຕ່ຳທີ່ສຸດຂອງກຳແພງໃນບໍລິເວນທີ່ກຳລັງເປີດຢູ່ນັ້ນ. ຂ້າພະເຈົ້າໄດ້ກຳນົດໃຫ້ແຕ່ລະຄອບຄົວມີດາບ
ຫອກ ແລະ ຄັນທະນູ, 14ແລ້ວຂ້າພະເຈົ້າກໍແນມເບິ່ງ, ແລະຢືນຂຶ້ນ, ແລະ ຂ້າພະເຈົ້າເວົ້າກັບພວກຂຸນນາງ, ພວກຜູ້ປົກຄອງ,
ແລະຄົນທີ່ເຫລືອນອກນັ້ນວ່າ, "ຢ່າຢ້ານພວກເຂົາເລີຍ ຈົ່ງລະນຶກເຖິງອົງພຣະຜູ້ເປັນເຈົ້າ, ຜູ້ຊົງຍິ່ງໃຫຍ່ ແລະຫນ້າຢຳເກງ.
ຈົ່ງຕໍ່ສູ້ເພື່ອຄອບຄົວຂອງທ່ານ, ລູກຊາຍລູກສາວຂອງທ່ານ ເມຍຂອງທ່ານ ແລະບ້ານຂອງທ່ານ."
15ເມື່ອສັດຕູຂອງເຮົາໄດ້ຍິນວ່າ ເຮົາໄດ້ຮູ້ແຜນການຂອງພວກເຂົາແລ້ວ, ແລະ ພຣະເຈົ້າໄດ້ຊົງທຳລາຍແຜນການຂອງພວກເຂົາ,
ເຮົາທຸກຄົນກໍກັບມາຍັງກຳແພງນັ້ນ, ແຕ່ລະຄົນຕ່າງກໍກັບມາທີ່ວຽກຂອງຕົນ. 16ຕັ້ງແຕ່ນັ້ນມາ
ຄົນຮັບໃຊ້ເຄິ່ງຫນຶ່ງເຮັດສະເພາະງານກໍ່ສ້າງກຳແພງ, ແລະຄົນຮັບໃຊ້ອີກເຄິ່ງຫນຶ່ງຖືຫອກ, ໂລ້, ຄັນທະນູ ແລະ ເຄື່ອງນຸ່ງຫຸ້ມເກາະ,
ໃນຂະນະທີ່ພວກຜູ້ນຳຢືນຢູ່ທາງຫລັງຄົນຢູດາຍທຸກຄົນ.
17ຄົນງານພວກດຽວກັນນີ້ທີ່ກຳລັງສ້າງກຳແພງ ແລະ ຂົນເຄື່ອງຂອງແລ້ວຍັງຕ້ອງຕ້ອນຮັບຫນ້າທີ່ເຝົ້າຍາມດ້ວຍ.
ທຸກຄົນເຮັດວຽກດ້ວຍເງິນຂ້າງຫນຶ່ງ, ແລະ ມືອີກຂ້າງຫນຶ່ງກໍຖືອາວຸດຂອງຕົນ. 18ຄົນກໍ່ສ້າງທຸກຄົນພາຍດາບ ແລະ
ມັນເປັນວິທີການທີ່ເຂົາເຮັດວຽກ ຄົນເປົ່າແກຄົນຫນຶ່ງຢູ່ຂ້າງຂ້າພະເຈົ້າ.
19ຂ້າພະເຈົ້າບອກກັບພວກຂຸນນາງ ແລະພວກເຈົ້າຫນ້າທີ່ ແລະ ຄົນທີ່ນອກນັ້ນວ່າ "ງານນີ້ໃຫຍ່ ແລະ ກວ້າງຂວາງຫລາຍ ແລະ
ເຮົາແຍກກັນໄປຢູ່ເທິງກຳແພງທີ່ຫ່າງຈາກກັນ. 20ເມື່ອພວກທ່ານໄດ້ຍິນສຽງເປົ່າແກທີ່ໃດ ພວກທ່ານຕ້ອງຮີບແລ່ນໄປສະຖານທີ່ນັ້ນ ແລະ
ລວມໂຕກັນທີ່ນັ້ນ. ພຣະເຈົ້າຂອງເຮົາຈະຊົງຕໍ່ສູ້ເພື່ອເຮົາ."
21ດັ່ງນັ້ນ ໃນເວລາທີ່ເຮົາກຳລັງເຮັດວຽກຢູ່. ພວກເຂົາເຄິ່ງຫນຶ່ງຈັບຫອກຕັ້ງແຕ່ເຊົ້າຈົນຮອດດາວຂຶ້ນ.
22ຂ້າພະເຈົ້າບອກກັບປະຊາຊົນໃນເວລານັ້ນອີກວ່າ, "ຂໍໃຫ້ຜູ້ຊາຍທຸກຄົນ ແລະ ຄົນຮັບໃຊ້ຂອງເຂົາຄ້າງຄືນຢູ່ທາງກາງຂອງເຢຣູຊາເລັມ,
ເພື່ອໃຫ້ພວກເຂົາເປັນຍາມເຝົ້າໃນຊ່ວງເວລາກາງຄືນ ແລະ ເປັນຄົນເຮັດວຽກໃນຕອນກາງເວັນ." 23ເພາະສະນັ້ນ ບໍ່ວ່າຂ້າພະເຈົ້າ, ຫລື
ພີ່ນ້ອງຂອງຂ້າພະເຈົ້າ, ຫລືຄົນຮັບໃຊ້ຂອງຂ້າພະເຈົ້າ ຫລື ຄົນຍາມທີ່ຕິດຕາມຂ້າພະເຈົ້າ, ບໍ່ມີໃຜໃນພວກເຮົາທີ່ປ່ຽນເສື້ອຜ້າ ແລະ
ເຮົາແຕ່ລະຄົນຕ່າງກໍຖືອາວຸດ ແມ່ນແຕ່ຕອນໄປອາບນ້ຳ.

5 [1]ພວກຜູ້ຊາຍ ແລະ ເມຍຂອງພວກເຂົາໄດ້ຮຽກຮ້ອງຢ່າງຮ້າຍແຮງຕໍ່ຕ້ານພີ່ນ້ອງ ຂອງຄົນຢິວຂອງເຂົາທັງຫລາຍ.[2]ເພາະມີບາງຄົນເວົ້າວ່າ,
"ພວກເຮົາມີລູກຊາຍ ແລະ ລູກຍິງມາກມາຍ. ຂໍໃຫ້ເຮົາມີເຂົ້າທີ່ຈະກິນ ແລະ ມີຊີວິດຢູ່ໄດ້."[3]ບາງຄົນເວົ້າວ່າ,
"ໃນຊ່ວງເວລາຂາດແຄນອາຫານ ເຮົາຈຳນຳໄຮ່ນາທັງຫລາຍຂອງເຮົາສວນອະງຸ່ນທັງຫລາຍຂອງເຮົາ, ແລະ
ບ້ານເຮືອນທັງຫລາຍຂອງເຮົາເພື່ອທີ່ຈະໄດ້ເຂົ້າ."

[4]ບາງຄົນເວົ້າວ່າ, "ເຮົາໄດ້ຢືມເງິນເພື່ອຈ່າຍພາສີໃຫ້ກະສັດເນື່ອງຈາກໄຮ່ນາ ແລະ ສວນອະງຸ່ນທັງຫລາຍຂອງພວກເຮົາ.[5]ສ່ວນເລືອດ
ແລະເນື້ອຂອງເຮົາກໍເປັນເຫມືອນພີ່ນ້ອງຂອງເຮົາ, ແລະ ລູກໆ ຂອງພວກເຂົາ
ເຮົາຖືກບັງຄັບໃຫ້ຂາຍລູກຊາຍລູກຍິງທັງຫລາຍຂອງເຮົາໃຫ້ເປັນທາດ. ລູກຍິງຂອງເຮົາບາງຄົນເປັນທາດແລ້ວ.
ແຕ່ມັນບໍ່ຢູ່ໃນກຳລັງຂອງເຮົາທີ່ຈະຊ່ວຍເພາະວ່າດຽວນີ້ພວກຜູ້ຊາຍຄົນອື່ນໆ ໄດ້ເປັນເຈົ້າຂອງທີ່ນາ ແລະສວນອະງຸ່ນຂອງເຮົາ."
[6]ຂ້ານ້ອຍຢາກຮ້າຍຫລາຍ ເມື່ອໄດ້ຍິນສຽງຮ້ອງໄຫ້ ແລະ ເລື່ອງລາວເລົ່ານີ້.[7]ຈາກນັ້ນຂ້າພະເຈົ້າຄິດເຖິງເລື່ອງນີ້, ແລະ
ໄດ້ນຳໄປກ່າວຫາພວກຂຸນນາງ ແລະ ເຈົ້າຫນ້າທີ່ທັງຫລາຍ. ຂ້ານ້ອຍເວົ້າກັບພວກເຂົາວ່າ, "ພວກທ່ານກຳລັງຮຽກຮ້ອງດອກເບ້ຍ,
ຈາກພີ່ນ້ອງຂອງຕົນ." ຂ້ານ້ອຍໄດ້ເອີ້ນປະຊຸມໃຫຍ່ເພື່ອຕໍ່ສູ້ກັບພວກເຂົາ[8]ແລະ ໄດ້ເວົ້າກັບພວກເຂົາວ່າ,
"ເຮົາໄດ້ນຳພີ່ນ້ອງຄົນຢິວທີ່ຖືກຂາຍໃຫ້ກັບບັນດາປະຊາຊາດທັງຫລາຍ ກັບມາຈາກການເປັນທາດຫລາຍເທົ່າທີ່ເຮົາສາມາດເຮັດໄດ້,
ແຕ່ພວກທ່ານກັບມາຂາຍພວກພີ່ນ້ອງຊາຍຍິງຂອງພວກທ່ານ ເພື່ອທີ່ພວກເຂົາຈະຖືກຂາຍກັບມາໃຫ້ເຮົາ!" ພວກເຂົາທັງຫລາຍມິດງຽບ
ເວົ້າບໍ່ອອກ.
[9]ຂ້າພະເຈົ້າເວົ້າອີກວ່າ, "ສິ່ງທີ່ພວກທ່ານກຳລັງເຮັດຢູ່ນັ້ນບໍ່ດີ. ພວກທ່ານບໍ່ຄວນໄດ້ດຳເນີນຊີວິດດ້ວຍຄວາມຢຳເກງພຣະເຈົ້າຂອງເຮົາ
ເພື່ອປ້ອງກັນການເຢາະເຢີ້ຍຂອງບັນດາປະຊາຊາດເຊິ່ງເປັນເຊິ່ງເປັນສັດຕູຂອງເຮົາບໍ?[10]ຂ້ານ້ອຍ ແລະ ພວກພີ່ນ້ອງ ແລະ
ຂ້າຮັບໃຊ້ຂອງຂ້ານ້ອຍ ກຳລັງໃຫ້ເຂົາຢືມເງິນ ແລະ ເຂົ້າ. ແຕ່ເຮົາຕ້ອງຢຸດການຄິດດອກເບ້ຍໃນການຢືມເຫລົ່ານີ້.[11]ຈົ່ງຄືນທີ່ນາຂອງພວກເຂົາ,
ສວນອະງຸ່ນຂອງພວກເຂົາ, ສວນຫມາກກອກເທດຂອງພວກເຂົາ, ແລະຄ່າທຳນຽມຂອງເງິນຢືມ, ເຂົ້າ, ເຫລົ້າອະງຸ່ນ ແລະ
ນ້ຳມັນທີ່ພວກທ່ານເອົາມາຈາກພວກເຂົາໃນໄວໆນີ້."
[12]ຈາກນັ້ນພວກເຂົາເວົ້າວ່າ, "ພວກເຮົາຈະຄືນຫຍັງກໍຕາມທີ່ເຮົາເອົາມາຈາກພວກເຂົາ, ແລະບໍ່ຮຽກຮ້ອງຫຍັງຈາກພວກເຂົາ.
ເຮົາຈະເຮັດຄືເຈົ້າເວົ້າ." ແລ້ວຂ້ານ້ອຍຈຶ່ງເອີ້ນບັນດາປະໂຣຫິດ, ແລະ ໃຫ້ພວກເຂົາສາບານວ່າຈະເຮັດດັ່ງທີ່ພວກເຂົາໄດ້ສັນຍາໄວ້.
[13]ຂ້ານ້ອຍໄດ້ສັ່ນເສື້ອຄຸມຂອງຂ້ານ້ອຍ ແລະ ໄດ້ເວົ້າວ່າ, "ຂໍໃຫ້ພຣະເຈົ້າສັ່ນສະບັດທຸກຄົນທີ່ບໍ່ຮັກສາຄຳເວົ້າ ອອກຈາກເຮືອນຂອງເຂົາ ແລະ
ຊັບສິນຂອງເຂົາ. ຂໍໃຫ້ເຂົາຖືກສະບັດອອກ ແລະ ບໍ່ມີຫຍັງ." ທຸກຄົນໃນທີ່ປະຊຸມກ່າວວ່າ, "ເອເມນ," ແລະ ພວກເຂົາໄດ້ສັນລະເສີນພຣະຢາເວ
ແລະ ປະຊາຊົນໄດ້ກະທຳດັ່ງທີ່ພວກເຂົາສັນຍາໄວ້.
[14]ຕັ້ງແຕ່ຂ້ານ້ອຍໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຂອງພວກເຂົາໃນແຜ່ນດິນຢູດາ,
ຈາກປີທີຊາວຈົນເຖິງປີທີຊາວສອງຂອງກະສັດອາກຕາເຊເຊັດ, ເປັນເວລາສິບສອງປີ, ບໍ່ວ່າຂ້ານ້ອຍ
ຫລືພີ່ນ້ອງອງຂ້ານ້ອຍບໍ່ໄດ້ກິນເຂົ້າທີ່ໄດ້ຈັດຕຽມໄວ້ສຳລັບຂ້ານ້ອຍໃນຖານະຜູ້ປົກຄອງ.[15]ແຕ່ວ່າຜູ້ປົກຄອງຄົນກ່ອນຫລາຍຄົນ
ກ່ອນຫນ້າຂ້ານ້ອຍໄດ້ວາງພາລະຫນັກເທິງປະຊາຊົນ, ແລະ ເກັບເງິນສີ່ສິບຫລຽນຈາກພວກເຂົາເພື່ອເປັນຄ່າອາຫານ ແລະ
ເຫລົ້າອະງຸ່ນຂອງເຂົາທັງຫລາຍ. ໃນແຕ່ລະວັນ ແມ່ນແຕ່ຄົນໃຊ້ຂອງເຂົາທັງຫລາຍກໍໄດ້ກົດຂີ່ຂົ່ມເຫັງປະຊາຊົນ.
ແຕ່ຂ້ານ້ອຍບໍ່ໄດ້ເຮັດແນວນັ້ນເພາະຄວາມຢຳເກງໃນພຣະເຈົ້າ.
[16]ຂ້ານ້ອຍຍັງຄົງເຮັດວຽກສ້າງກຳແພງ, ແລະ ພວກເຮົາບໍ່ໄດ້ຊື້ທີ່ດິນ ແລະ ຄົນຮັບໃຊ້ທັງຫມົດຂອງຂ້ານ້ອຍຮ່ວມກັນຢູ່ທີ່ນັ້ນເພື່ອເຮັດວຽກ.
[17]ທີ່ໂຕະຂອງຂ້ານ້ອຍມີຄົນຢິວ ແລະເຈົ້າຫນ້າທີ່ທັງຫລາຍ, 150 ຄົນ, ບໍ່ນັບຫລາຍຄົນທີ່ມາຈາກບັນດາຊົນຊາດທັງຫລາຍທີ່ຢູ່ຮອບໆພວກເຮົາ.
[18]ດຽວນີ້ ສິ່ງທີ່ໄດ້ຈັດຕຽມໃນແຕ່ລະມື້ ຄື ງົວຫນຶ່ງໂຕ, ແກະ ທີ່ຄັດເລືອກແລ້ວຫົກໂຕ, ແລະ ມີນົກນຳ, ແລະ ທຸກໆສິບມື້
ມີເຫລົ້າອະງຸ່ນຊະນິດຕ່າງໆຫລວງຫລາຍ, ແຕ່ທັງຫມົດນີ້ ຂ້ານ້ອຍບໍ່ໄດ້ຮຽກຮ້ອງເອົາອາຫານສຳລັບຜູ້ປົກຄອງ,
ເພາະວ່າການຮຽກຮ້ອງພາລະຫນັກເກີນໄປສຳລັບປະຊາຊົນ.[19]ຂ້າແຕ່ພຣະເຈົ້າຂອງພວກຂ້ານ້ອຍ, ຂໍຊົງລະລຶກເຖິງຂ້ານ້ອຍ
ຂໍໃຫ້ເກີດຜົນເພາະຂ້ານ້ອຍໄດ້ເຮັດທຸກສິ່ງເພື່ອປະຊາຊົນເຫລົ່ານີ້.

 generated on Tue Jun 17 19:01:42 2025

6 [1]ບັດນີ້ ເມື່ອສານບັນລັດ, ໂຕບີຢາ, ແລະ ເກເຊມຊາວອາຣັບ ແລະ ສັດຕູທີ່ເຫລືອຂອງພວກເຮົາໄດ້ຍິນວ່າ ຂ້ານ້ອຍໄດ້ກໍ່ກຳແພງອີກຄັ້ງ
ແລະບໍ່ມີສ່ວນໃດຖືກຖິ້ມໃຫ້ເປັນຮອຍແຕກເລີຍ, ເຖິງແມ່ນວ່າຂ້ານ້ອຍຍັງບໍ່ໄດ້ຕັ້ງບານປະຕູເມືອງທັງຫລາຍ,[2]ສານບັນລັດ ແລະ ເກເຊມ
ໄດ້ສົ່ງຂ່າວມາຫາຂ້ານ້ອຍວ່າ, "ມາ, ໃຫ້ພວກເຮົາມາພົບກັນໃນທົ່ງພຽງແຫ່ງຫນຶ່ງຂອງຫມູ່ບ້ານໂອໂນ."
ແຕ່ພວກເຂົາໄດ້ຕັ້ງໃຈທີ່ຈະທຳຮ້າຍຂ້ານ້ອຍ.

[3]ຂ້ານ້ອຍໄດ້ສົ່ງພວກຜູ້ສົ່ງຂ່າວສານໄປຫາພວກເຂົາ, ກ່າວວ່າຂ້ານ້ອຍ, "ຂ້ານ້ອຍກຳລັງເຮັດວຽກທີ່ຍິ່ງໃຫຍ່, ແລະ
ຂ້ານ້ອຍບໍ່ສາມາດລົງມາໄດ້. ເປັນຫຍັງຕ້ອງໃຫ້ວຽກຢຸດ ໃນຂະນະທີ່ຂ້ານ້ອຍຖິ້ມງານ
ແລະລົງມາຫາພວກທ່ານ?"[4]ແລ້ວພວກເຂົາກໍ່ສົ່ງຂໍ້ຄວາມຄືກັນມາໃຫ້ຂ້ານ້ອຍສີ່ເທື່ອ, ແລະ ຂ້ານ້ອຍກໍຕອບເຂົາໄປທຳນອງດຽວກັນທຸກຄັ້ງ.
[5]ສານບັນລັດໄດ້ສົ່ງຄົນຮັບໃຊ້ມາຫາຂ້ານ້ອຍໃນທຳນອງດຽວກັນເປັນເທື່ອທີຫ້າ, ພ້ອມດ້ວຍຈົດຫມາຍ ທີ່ມີລັກສະນະເປີດຊອງໄວ້ໃນມືຂອງເຂົາ.
[6]ໃນນັ້ນຂຽນວ່າ, "ມີລາຍງານທ່າມກາງປະຊາຊາດທັງຫລາຍ, ແລະ ເກເຊມກໍໄດ້ເວົ້ານຳວ່າທ່ານ ແລະພວກຢິວກຳລັງວາງແຜນກໍ່ກະບົດ,
ເພາະສະນັ້ນເປັນເຫດຜົນທີ່ທ່ານຈຶ່ງກໍ່ກຳແພງນີ້ຂຶ້ນອີກ. ຈາກທີ່ລາຍງານເຫລົ່ານີ້ໄດ້ກ່າວໄວ້, ທ່ານກຳລັງຈະກາຍເປັນກະສັດຂອງພວກເຂົາ.
[7]ທ່ານໄດ້ແຕ່ງຕັ້ງພວກຜູ້ປະກາດພຣະທຳ ເພື່ອປະກາດກ່ຽວກັບທ່ານ ໃນກຸງເຢຣູຊາເລັມ, ກ່າວວ່າ, "ມີກະສັດໃນຢູດາ"
ທ່ານສາມາດແນ່ໃຈໄດ້ວ່າກະສັດຈະໄດ້ຍິນລາຍງານເຫລົ່ານີ້. ດັ່ງນັ້ນ ມາຈົ່ງມາສາ, ໃຫ້ເຮົາມາຫາລືນຳກັນ."
[8]ແລ້ວຂ້ານ້ອຍກໍສົ່ງຖ້ອຍຄຳໄປຫາເຂົາກ່າວດັ່ງນີ້ວ່າ, "ບໍ່ມີສິ່ງໃດເກີດຂຶ້ນຕາມທີ່ທ່ານກ່າວມາເລີຍ,
ເພາະໃນໃຈຂອງທ່ານແຕ່ງມັນຂຶ້ນມາເອງທັງນັ້ນ."[9]ເພາະພວກເຂົາທັງຫມົດຕ້ອງການໃຫ້ເຮົາຢ້ານ, ຄິດວ່າ, "ພວກເຂົາຈະເຊົາເຮັດວຽກ ແລະ
ວຽກຈະບໍ່ສຳເລັດ." ແຕ່ບາດນີ້, ພຣະເຈົ້າ, ຂໍໂຜດເສີມກຳລັງມືຂອງຂ້ານ້ອຍດ້ວຍ.
[10]ຂ້ານ້ອຍໄດ້ໄປທີ່ບ້ານຂອງເຊມາອີຢາລູກຂອງເດລາອີຢາ ລູກຂອງເມເຮຕາເບນ, ຜູ້ທີ່ເກັບຕົວຢູ່ໃນບ້ານຂອງເຂົາ. ເຂົາເວົ້າວ່າ,
"ໃຫ້ເຮົາພົບກັນໃນພຣະວິຫານຂອງພຣະເຈົ້າ, ໃນພຣະວິຫານ, ແລະ ໃຫ້ເຮົາປິດປະຕູພຣະວິຫານ, ເພາະວ່າພວກເຂົາກຳລັງມາຂ້າທ່ານ.
[11]ຂ້ານ້ອຍຕອບວ່າ "ຄົນແບບຂ້ານ້ອຍຈະແລ່ນຫນີບໍ່? ຊາຍແບບຂ້ານ້ອຍເຂົ້າໄປໃນພຣະວິຫານກໍເພື່ອຈະຮັກສາຊີວິດຂອງຕົນບໍ່?
ຂ້ານ້ອຍຈະບໍ່ເຂົ້າໄປ!"
[12]ຂ້ານ້ອຍຄິດເບິ່ງວ່າ ພຣະເຈົ້າບໍ່ໄດ້ຊົງໃຊ້ເຂົາ, ແຕ່ເຂົາໄດ້ເຜີຍພຣະວັດຈະນະໃສ່ຮ້າຍຂ້ານ້ອຍ. ໂຕບີຢາ ແລະ ສານບັນລັດໄດ້ວ່າຈ້າງເຂົາ.
[13]ພວກເຂົາໄດ້ຈ້າງເຂົາມາເພື່ອເຮັດໃຫ້ຂ້ານ້ອຍຢ້ານ, ດັ່ງນັ້ນຂ້ານ້ອຍອາດເຮັດສິ່ງທີ່ເຂົາໄດ້ເວົ້າ ແລະເປັນບາບ,
ເພື່ອທີ່ພວກເຂົາຈະໃສ່ຮ້າຍຂ້ານ້ອຍເພື່ອເຢາະເຢີ້ຍຂ້ານ້ອຍ ໂອຂ້າແດ່ພຣະເຈົ້າ[14]ຂໍຊົງລະລຶກເຖິງໂຕບີຢາ, ແລະ ສານບັນລັດ,
ໂອພຣະເຈົ້າຂອງຂ້ານ້ອຍ, ແລະ ສິ່ງທັງຫມົດທີ່ພວກເຂົາໄດ້ເຮັດ. ຊົງລະລຶກເຖິງຜູ້ເຜີຍພຣະວັດຈະນະຍິງໂນອາດີຢາ ແລະ
ຜູ້ເຜີຍພຣະວັດຈະນະຄົນອື່ນໆ ຜູ້ທີ່ພະຍາຍາມເຮັດໃຫ້ຂ້ານ້ອຍຢ້ານ.
[15]ດັ່ງນັ້ນກຳແພງໄດ້ສຳເລັດແລ້ວໃນມື້ທີຊາວຫ້າຂອງເດືອນເອລູນ, ຫລັງຈາກຫ້າສິບສອງມື້.
[16]ເມື່ອສັດຕູທັງຫມົດຂອງພວກເຮົາທັງຫລາຍໄດ້ຍິນເລື່ອງນີ້, ປະຊາຊາດທັງປວງອ້ອມພວກເຮົາ, ພວກເຂົາກໍຢ້ານ ແລະ
ພວກເຂົາກໍເຫັນກັບຕາຂອງພວກເຂົາເອງ.
ເພາະພວກເຂົາທັງຫລາຍຮູ້ວ່າວຽກງານສຳເລັດກໍເພາະການຊົງຊ່ວຍເຫລືອຂອງພຣະເຈົ້າຂອງພວກເຮົາ.
[17]ໃນເວລານີ້ ຂຸນນາງທັງຫລາຍຂອງຢູດາຍກໍໄດ້ສົ່ງຈົດຫມາຍຫລາຍສະບັບໄປເຖິງໂຕບີຢາ, ແລະ ຈົດຫມາຍຂອງໂຕບີຢາກໍມາເຖິງເຂົາ.
[18]ເພາະມີຫລາຍຄົນໃນຢູດາຍໄດ້ຜູກພັນກັບເຂົາດ້ວຍຄຳສາບານຕໍ່ເຂົາ, ເພາະວ່າເຂົາເປັນລູກເຂີຍຂອງເຊການີຢາຜູ້ເປັນລູກຂອງອາຣາ.
ລູກຂອງເຂົາຊື່ເຢໂຮຮານານ ໄດ້ຮັບລູກຍິງຂອງເມຊູນລຳລູກຂອງເບເຣກີຢາເປັນເມຍ.[19]ພວກເຂົາທັງຫລາຍເວົ້າກັບຂ້ານ້ອຍ
ກ່ຽວກັບການກະທຳດີຂອງເຂົາ ແລະ ໄດ້ລາຍງານຄຳຂອງຂ້ານ້ອຍໄປໃຫ້ເຂົາ.
ຈົດຫມາຍຈາກໂຕບີຢາຖືກສົ່ງມາໃຫ້ຂ້ານ້ອຍເພື່ອເຮັດໃຫ້ຂ້ານ້ອຍຢ້ານ.


generated on Tue Jun 17 19:01:42 2025

7 [1]ເມື່ອກຳແພງເມືອງຖືກສ້າງສຳເລັດແລ້ວ ແລະ ຂ້ານ້ອຍຈຶ່ງຕິດຕັ້ງປະຕູເຂົ້າ, ແລະ ໄດ້ແຕ່ງຕັ້ງບັນດາຍາມເຝົ້າປະຕູ ແລະ
ຄະນະນັກຮ້ອງແລະ ບັນດາຄົນເລວີທັງຫລາຍ,[2]ຂ້ານ້ອຍໄດ້ມອບຫມາຍໃຫ້ຮານານີ
ພີ່ນ້ອງຂອງຂ້ານ້ອຍຮ່ວມກັບຮານານີຢາຜູ້ກວດການປ້ອມເພື່ອເບິ່ງແຍງເຢຣູຊາເລັມ, ເພາະເຂົາເປັນຊາຍທີ່ສັດຊື່ແລະ
ຢຳເກງພຣະເຈົ້າຫລາຍກວ່າຄົນອື່ນອີກຫລາຍຄົນ.

[3]ຂ້ານ້ອຍກ່າວແກ່ພວກເຂົາວ່າ, "ຢ່າເປີດປະຕູເຢຣູຊາເລັມຈົນກວ່າ ແດດຈະຮ້ອນ. ໃນຂະນະທີ່ຍາມເຝົ້າປະຕູທັງຫລາຍປະຈຳການຢູ່ນັ້ນ,
ຂໍໃຫ້ພວກທ່ານປິດປະຕູ ແລະ ໃສ່ກອນປະຕູເຫລົ່ານັ້ນ. ແຕ່ງຕັ້ງຄົນເຫລົ່ານັ້ນທີ່ອາໄສຢູ່ໃນເຢຣູຊາເລັມ,
ໃຫ້ເປັນພະຍານຮັກສາວຽກຄືໃຫ້ບາງຄົນປະຈຳຢູ່ສະຖານີເຝົ້າລະວັງ, ແລະ
ບາງຄົນປະຈຳຢູ່ຫນ້າບ້ານຂອງເຂົາເອງ."[4]ເວລານີ້ເຢຣູຊາເລັມກ້ວາງ ແລະ ໃຫຍ່ຂຶ້ນຫລາຍ, ແຕ່ມີຜູ້ອາໄສຢູ່ຈຳນວນຫນ້ອຍ ແລະ
ຍັງບໍ່ມີບ້ານເຮືອນຖືກສ້າງຂຶ້ນມາໃຫມ່.
[5]ພຣະເຈົ້າຂອງຂ້ານ້ອຍຊົງບັນດານໃຈໃຫ້ຂ້ານ້ອຍລວບລວມບັນດາຂຸນນາງ, ເຈົ້າຫນ້າທີ່ຣາຊການ, ແລະ
ປະຊາຊົນທັງຫລາຍໃຫ້ລົງທະບຽນຕາມຄອບຄົວຂອງພວກເຂົາ.
ຂ້ານ້ອຍໄດ້ຄົ້ນພົບຫນັງສືຕາມລຳດັບເຜົ່າພັນຂອງບັນດາຄົນທີ່ກັບມາເປັນຄົນທຳອິດ ແລະ ໄດ້ພົບສິ່ງທີ່ບັນທຶກເອົາໄວ້ໃນຫນັງສືດັ່ງຕໍ່ໄປນີ້.
[6]"ເຫລົ່ານີ້ຄືປະຊາຊົນທີ່ຢູ່ອານາເຂດຊຶ່ງອອກມາຈາກການເປັນຊະເລີຍເມື່ອຄັ້ງທີ່ກະສັດເນບູກາດເນັດຊາແຫ່ງບາບີໂລນ
ໄດ້ກວາດຕ້ອນພວກເຂົາໄປ. ພວກເຂົາກັບມາຍັງເມືອງຂອງຕົນໃນເຢຣູຊາເລັມ ແລະ ຢູດາ, ໃນແຕ່ລະເມືອງຂອງເຂົາ.
[7]ພວກເຂົາໄດ້ມາພ້ອມກັບເສຣຸບບາເບນ, ເຢຊູອາ, ເນເຫມີຢາ, ອາຊາຣີຢາ, ຣາອາມີຢາ, ນາຮາມານີ, ມໍເດໄກ, ບິນຊານ, ມິສະເປເຣດ,
ບິກໄຫວ, ເນຮຸມ, ແລະ ບາອານາຈຳນວນຄົນຂອງຊາວອິດສາຣາເອນມີດັ່ງນີ້.
[8]ເຊື້ອສາຍຈາກປາໂຣດ, 2,172 ຄົນ.[9]ເຊື້ອສາຍຂອງເຊຟາຕີຢາ 372 ຄົນ.[10]ເຊື້ອສາຍຂອງອາຣາ 652 ຄົນ.
[11]ເຊື້ອສາຍຂອງປາຮາດໂມອາບ, ໂດຍຜ່ານທາງເຊື້ອສາຍຂອງເຢຊູອາ ແລະ ໂຢອາບ 2,818 ຄົນ.[12]ເຊື້ອສາຍຂອງເອຣາມ 1,254 ຄົນ.
[13]ເຊື້ອສາຍຂອງຊັດຕູ, 845 ຄົນ.[14]ເຊື້ອສາຍຂອງຊັກກາຍ, 760 ຄົນ
[15]ເຊື້ອສາຍຂອງບິນນູອີ, 648 ຄົນ[16]ເຊື້ອສາຍຂອງເບບາຍ, 628 ຄົນ.[17]ເຊື້ອສາຍຂອງອາຊະກາດ, 2,322 ຄົນ.[18]ເຊື້ອສາຍຂອງອາໂດນີກຳ
667 ຄົນ.
[19]ເຊື້ອສາຍຂອງບິກໄຫວ, 2,067 ຄົນ.[20]ເຊື້ອສາຍຂອງອາດີນ, 655 ຄົນ.[21]ເຊື້ອສາຍຂອງອາເຕ, ມີຊື່ອີກວ່າເຮເຊກີຢາ, 98 ຄົນ.
[22]ເຊື້ອສາຍຂອງຮາຊຸມ, 328 ຄົນ.
[23]ເຊື້ອສາຍຂອງເບໄຊ, 324 ຄົນ.[24]ເຊື້ອສາຍຂອງຮາຣິບ, 122 ຄົນ.[25]ເຊື້ອສາຍຂອງກິເບໂອນ, 95 ຄົນ.[26]ເຊື້ອສາຍຂອງເບັດເລເຮັມ ແລະ
ເນໂຕຟາ, 188 ຄົນ.
[27]ຊາວຂອງອານາທົດ, 128 ຄົນ.[28]ຊາຍຊາວຣາມາ ເບັດອາຊະມາເວດ, 42 ຄົນ.[29]ຊາວກີຣີອາດເຢອາຣິມ, ເກຟີຣາ ແລະ ເບເອໂຣດ, 743
ຄົນ.[30]ຊາວຣາມາ ແລະເກບາ 621, ຄົນ.
[31]ຊາວມິກມາດ, 122 ຄົນ.[32]ຊາວເບັດເອນ ແລະ ອາອີ, 123 ຄົນ.[33]ອີກແຫ່ງອື່ນ 52 ຄົນ.[34]ຊາວເອລາມ, ອີກແຫ່ງອື່ນ1,254 ຄົນ.
[35]ຊາວຮາຣິມ, 320 ຄົນ.[36]ຊາວເຢຣີໂກ, 345 ຄົນ.[37]ຊາວໂລດ, ຮາດິດ, ແລະ ຊາວໂອໂນ, 721 ຄົນ.[38]ຊາວເສນາຢາ 3,930 ຄົນ.
[39]ບັນດາປະໂຣຫິດໄດ້ແກ່: ເຊື້ອສາຍຂອງເຢດາອີຢາ (ໂດຍທາງສາຍຄອບຄົວຂອງເຢຊູອາ), 973 ຄົນ.[40]ເຊື້ອສາຍຂອງອິມເມ, 1,052 ຄົນ.
[41]ເຊື້ອສາຍຂອງປັດຊູ, 1,247 ຄົນ.[42]ເຊື້ອສາຍຂອງຮາຣິມ, 1,017 ຄົນ.
[43]ບັນດາຄົນເລວີໄດ້ແກ່: ເຊື້ອສາຍຂອງເຢຊູອາ, ກາດມີເອນ, ບິນນຸຍ, ແລະ ໂຮດາວີຢາ, 74 ຄົນ.[44]ນັກດົນຕຣີໄດ້ແກ່: ເຊື້ອສາຍຂອງອາສັບ,
148 ຄົນ.[45]ບັນດາຄົນເຝົ້າຍາມພຣະວິຫານ ເຊື້ອສາຍຂອງຊານລູມ, ເຊື້ອສາຍຂອງອາເຕ, ເຊື້ອສາຍຂອງຕານໂມນ, ເຊື້ອສາຍຂອງອັກກຸບ,
ເຊື້ອສາຍຂອງຮາຕີຕາ, ແລະ ເຊື້ອສາຍຂອງໂຊບາຍ, 138 ຄົນ.
[46]ບັນດາຄົນຮັບໃຊ້ໃນພຣະວິຫານ: ທີ່ກັບຄືນມາຈາກການເປັນຊະເລີຍໄດ້ແກ່ຊີຮາ, ເຊື້ອສາຍຂອງຮາສູຟາ, ເຊື້ອສາຍຂອງຕັບບາອົດ,
[47]ເຊື້ອສາຍຂອງເກໂຣ, ເຊື້ອສາຍຂອງສີອາ, ເຊື້ອສາຍຂອງປາໂດນ,[48]ເຊື້ອສາຍຂອງເລບານາ, ເຊື້ອສາຍຂອງຮາກາບາ, ເຊື້ອສາຍຂອງຊານໄມ,
[49]ເຊື້ອສາຍຂອງຮານານ, ເຊື້ອສາຍຂອງກິດເດນ, ເຊື້ອສາຍຂອງກາຮາ.
[50]ເຊື້ອສາຍຂອງເຣອາອີຢາ, ເຊື້ອສາຍຂອງເຣຊີນ, ເຊື້ອສາຍຂອງເນໂກດາ,[51]ເຊື້ອສາຍຂອງກັດຊຳ, ເຊື້ອສາຍຂອງອຸດຊາ,
ເຊື້ອສາຍຂອງປາເສຢາ,[52]ເຊື້ອສາຍຂອງເບສາຍ, ເຊື້ອສາຍຂອງເມອູນີມ, ເຊື້ອສາຍຂອງເນຟູເຊສີມ.
[53]ເຊື້ອສາຍຂອງບັກບຸກ, ເຊື້ອສາຍຂອງຮາກູຟາ,[54]ເຊື້ອສາຍຂອງຮັກຮູຣະ, ເຊື້ອສາຍຂອງບາຊະລິດ, ເຊື້ອສາຍຂອງເມຮີດາ,
ເຊື້ອສາຍຂອງຮັກຊາ,[55]ເຊື້ອສາຍຂອງສີເດຣາ, ເຊື້ອສາຍຂອງເຕມາ,[56]ເຊື້ອສາຍຂອງເນຊີຢາ, ແລະ ເຊື້ອສາຍຂອງຮາຕີຟາ.
[57]ບັນດາເຊື້ອສາຍຂອງຜູ້ຮັບໃຊ້ຂອງໂຊໂລໂມນໄດ້ແກ່: ເຊື້ອສາຍຂອງໂສໄຕ, ເຊື້ອສາຍຂອງໂສເຟເຣັດ, ເຊື້ອສາຍຂອງເປຣີດາ,
[58]ເຊື້ອສາຍຂອງຢາອາລາ, ເຊື້ອສາຍຂອງດາກໂກນ, ເຊື້ອສາຍຂອງກິດເດນ[59]ເຊື້ອສາຍຂອງເຊຟາຕີຢາ, ເຊື້ອສາຍຂອງຮັດຕິນ,
ເຊື້ອສາຍຂອງໂປເກເຣດຮັດເຊບາອິມ, ແລະ ເຊື້ອສາຍຂອງອາໂມນ.[60]ຜູ້ຮັບໃຊ້ທັງຫມົດໃນພຣະວິຫານ,
ໂຊໂລໂມນທີ່ໄດ້ກັບມາຈາກການເປັນຊະເລີຍໃນຕ່າງຖິ່ນມີທັງຫມົດ, 392 ຄົນ.
[61]ເຫລົ່ານີ້ແມ່ນຄົນເດີນທາງມາຈາກເມືອງເຕັນເມລາ, ເຕັນຮັກຊາ, ເຄຣຸບ, ອັດໂດນ, ແລະ ອິມເມ.
ແຕ່ພວກເຂົາພິສູດບໍ່ໄດ້ວ່າພວກຕົນເປັນເຊື້ອສາຍຂອງອິດສະຣາເອນ:[62]ເຊື້ອສາຍຂອງຂອງເດລາອີຢາ, ເຊື້ອສາຍຂອງໂຕບີຢາ, ແລະ
ເຊື້ອສາຍຂອງເນໂກດາ, ມີ642 ຄົນ.[63]ຕະກຸນຕ່າງໆຕໍ່ໄປນີ້ແມ່ນຈາກປະໂຣຫິດມີຄື: ເຊື້ອສາຍຂອງໂຮບາອີຢາ, ເຊື້ອສາຍຂອງຮັກກົດ, ແລະ
ບາກຊິນໄລ (ຜູ້ທີ່ໄດ້ແຕ່ງງານກັບລູກສາວຜູ້ຫນຶ່ງຈາກຕະກຸນບາກຊິນໄລ ແຫ່ງ ກິເລອາດ ແລະ ໄດ້ໃສ່ຊື່ຕາມຕະກຸນຂອງພວກເຂົາ).
[64]ຄົນເຫລົ່ານີ້ໄດ້ຄົ້ນຫາທັງຫນັງສືບັນທຶກເຜົ່າພັນຂອງພວກເຂົາ, ແຕ່ພວກເຂົາບໍ່ພົບຊື່ຂອງພວກເຂົາ,
ດັ່ງນັ້ນພວກເຂົາຈຶ່ງບໍ່ຖືກນັບເຂົ້າກັບບັນດາປະໂຣຫິດເນື່ອງຈາກເປັນມົນທິນ.[65]ດັ່ງນັ້ນຜູ້ວ່າການຈຶ່ງເວົ້າກັບພວກເຂົາວ່າ

ພວກເຂົາບໍ່ສົມຄວນໄດ້ຮັບອະນຸຍາດໃຫ້ກິນອາຫານທີ່ມາຈາກແທ່ນບູຊາ
ຮ່ວມກັບບັນດາປະໂຣຫິດຈົນກວ່າປະໂຣຫິດຄົນຫນຶ່ງຈະຍົກເລື່ອງນີ້ຂຶ້ນໂດຍທາງອູຣິມ ແລະ ທູມມີມ.
[66]ລວມຄົນກຸ່ມນີ້ມີຈໍານວນທັງຫມົດ 42,360 ຄົນ,[67]ບໍ່ລວມບັນດາຄົນຮັບໃຊ້ຊາຍ ແລະ ຍິງຂອງພວກເຂົາຈໍານວນ, 7,337 ຄົນ.
ພວກເຂົາມີຄະນະນັກຮ້ອງຍິງ ແລະນັກຮ້ອງຊາຍຂອງພວກເຂົາມີຈໍານວນ 245 ຄົນ.
[68]ມ້າຂອງພວກເຂົາຈໍານວນ 736 ໂຕ, ມີໂຕລໍ 245 ໂຕ,[69]ມີໂຕອູດ 435 ໂຕ, ແລະມີໂຕລາ 6,720 ໂຕ.
[70]ປະຊາຊົນຫລາຍຄົນໃນທ່າມກາງຫົວຫນ້າຄອບຄົວເຈົ້າກົກເຈົ້າເຫລົ່າ ໄດ້ຈ່າຍຄ່າສໍາລັບງານ. ຜູ້ປົກຄອງໄດ້ເອົາທອງຄໍາຫນັກ 8 ກິໂລ, ຊາມ 50 ໃບ, ແລະ ເຄື່ອງແຕ່ງກາຍສໍາລັບປະໂຣຫິດ 530 ຊຸດ.[71]ຫົວຫນ້າຄອບຄົວຂອງບັນພະບູລຸດ ບາງຄົນໄດ້ມອບທອງຄໍາຫນັກປະມານ 170 ກິໂລ, ເງິນປະມານ 1,2 ຕັນ. ເພື່ອເຂົ້າໃນຄັງຊັບສໍາລັບວຽກນີ້.[72]ສ່ວນປະຊາຊົນທີ່ເຫລືອໄດ້ມອບທອງຄໍາຫນັກປະມານ 170 ກິໂລ, ແລະ ເງິນປະມານ 1,1 ຕັນ ແລະເຄື່ອງແຕ່ງກາຍຂອງປະໂລຫິດຈໍານວນ 67 ຊຸດ.
[73]ດັ່ງນັ້ນບັນດາປະໂຣຫິດ, ຄົນເລວີ, ຍາມເຝົ້າປະຕູ, ຄະນະນັກຮ້ອງປະຊາຊົນບາງຄົນ, ບັນດາຄົນຮັບໃຊ້ໃນພຣະວິຫານບາງຄົນ,
ແລະຊາວອິດສະຣາເອນທັງຫມົດຕ່າງກໍອາໄສຢູ່ໃນເມືອງຂອງພວກເຂົາ.
ເປັນເວລາເຈັດເດືອນທີ່ຊາວອິດສະຣາເອນໄດ້ຕັ້ງຖິ່ນຖານໃນເມືອງພວກເຂົານັ້ນ."

 generated on Tue Jun 17 19:01:42 2025

8 1ປະຊາຊົນທັງຫມົດມາຊຸມນຸມກັນຢູ່ຫນ້າປະຕູນ້ຳ. ພວກເຂົາຂໍໃຫ້ເອຊະຣາຜູ້ເປັນປະໂຣຫິດ ໃຫ້ນຳເອົາຫນັງສືແຫ່ງພຣະບັນຍັດຂອງໂມເຊ,
ຊຶ່ງພຣະຢາເວໄດ້ຊົງບັນຊາໄວ້ອອກໃນອິດສະຣາເອນ.2ໃນວັນທີຫນຶ່ງຂອງເດືອນທີເຈັດ, ເອຊະຣາຜູ້ເປັນປະໂຣຫິດ
ໄດ້ນຳພຣະບັນຍັດມາຕໍ່ຫນ້າຊຸມນຸມຊົນ, ທັງຊາຍ ແລະຍິງ ແລະທຸກຄົນທີ່ສາມາດຟັງ ແລະເຂົ້າໃຈໄດ້.3ທ່ານໄດ້ຫັນຫນ້າໄປພື້ນທີ່ໂລ່ງ
ຢູ່ຫນ້າປະຕູນ້ຳ, ແລະ ອ່ານຕັ້ງແຕ່ເຊົ້າຈົນຮອດທ່ຽງວັນ, ຕໍ່ຫນ້າຊາຍຍິງ ແລະ ຜູ້ທີ່ສາມາດເຂົ້າໃຈ, ແລະ
ປະຊາຊົນທັງປວງຕ່າງກໍຕັ້ງໃຈຟັງຫນັງສືພຣະບັນຍັດນັ້ນ.

4ແລ້ວເອຊະຣາຜູ້ເປັນປະໂຣຫິດໄດ້ຢືນຢູ່ເທິງທ່ອນໄມ້ ຊຶ່ງປະຊາຊົນໄດ້ເຮັດຂຶ້ນມາເພື່ອຈຸດປະສົງນີ້. ຢູ່ຂ້າງທ່ານມີມັດຕີທີຢາ, ເຊມາ ອານາອີຢາ,
ອູຣີຢາ, ຮິນກີຢາ, ແລະ ມາອາເສອີຢາ, ຢືນຢູ່ຂົວມືຂອງທ່ານ, ແລະ ເປດາອີຢາ ມີຊາເອນ, ມັນກີຢາ, ຮາຊຸມ, ຮັດສະບັດດານາ, ເຊກາຣີຢາ,
ແລະ ເມຊຸນລຳ ຢືນຢູ່ຊ້າຍມືຂອງເຂົາ.5ເອຊະຣາໄດ້ເປີດຫນັງສືຕໍ່ສາຍຕາປະຊາຊົນທັງປວງ ເພາະທ່ານຢືນຢູ່ສູງກວ່າປະຊາຊົນ, ແລະ
ເມື່ອທ່ານເປີດຫນັງສືນັ້ນພວກປະຊາຊົນທັງປວງກໍຢືນຂຶ້ນ.
6ເອຊະຣາຂອບພຣະຄຸນພຣະຢາເວ, ຜູ້ຊົງເປັນພຣະເຈົ້າຍິ່ງໃຫຍ່, ແລະປະຊາຊົນທັງປວງໄດ້ຍົກມືຂອງພວກເຂົາຂຶ້ນ ແລະຕອບວ່າ, "ອາເມນ!
ອາເມນ!" ແລ້ວພວກເຂົາກໍກົ້ມຫົວລົງ ແລະນົບ ນະມັດສະການພຣະຢາເວ ຈົນຫນ້າຂອງພວກເຂົາຕິດກັບພື້ນ.7ເຢຊູອາ, ບານີ, ເຊເຣບີຢາ,
ຢາມິນ, ອັກກຸບ, ຊັບເບທາຍ, ໂຮດີຢາ, ມາອາ, ເສອີຢາ, ເກລີຕາ, ອາຊາຣີຢາ, ໂຢຊາບັດ, ຮານານ, ແລະ ເປລາອີຢາ - ພວກຄົນເລວີ -
ໄດ້ຊ່ວຍປະຊາຊົນໃຫ້ເຂົ້າໃຈພຣະບັນຍັດ, ໃນຂະນະທີ່ປະຊາຊົນຍັງຢືນຢູ່ກັບບ່ອນ.8ພວກເຂົາໄດ້ອ່ານຫນັງສືນັ້ນ,
ຊຶ່ງເປັນພຣະບັນຍັດຂອງພຣະເຈົ້າ, ເຮັດໃຫ້ຊັດເຈນໂດຍການແປ ແລະ ຕີຄວາມຫມາຍ ດັ່ງນັ້ນປະຊາຊົນຈຶ່ງເຂົ້າໃຈສິ່ງທີ່ໄດ້ອ່ານໄປ.
9ເນເຫມີຢາຜູ້ທີ່ເປັນຜູ້ປົກຄອງ, ແລະເອຊະຣາຜູ້ເປັນປະໂຣຫິດ, ແລະ
ຄົນເລວີຜູ້ໄດ້ແປຄວາມຫມາຍໃຫ້ກັບປະຊາຊົນໄດ້ເວົ້າກັບປະຊາຊົນທັງຫມົດວ່າ, "ວັນນີ້ເປັນວັນບໍຣິສຸດແດ່ພຣະຢາເວພຣະເຈົ້າຂອງພວກທ່ານ.
ຈົ່ງຢ່າໄວ້ທຸກຫລືຮ້ອງໄຫ້." ເພາະປະຊາຊົນທັງປວງ ຕ່າງກໍຮ້ອງໄຫ້ເມື່ອໄດ້ຍິນຖ້ອຍຄຳຂອງພຣະບັນຍັດນັ້ນ.
10ແລ້ວເນເຫມີຢາໄດ້ກ່າວກັບພວກເຂົາວ່າ, "ໄປເທີນ, ໄປຮັບປະທານໄຂມັນ ແລະ ດື່ມນ້ຳຫວານແລະ ສົ່ງອາຫານບາງສ່ວນ,
ໃຫ້ກັບຄົນທີ່ບໍ່ມີຫຍັງຕຽມໄວ້, ເພາະວັນນີ້ເປັນວັນບໍຣິສຸດ ແດ່ອົງພຣະຜູ້ເປັນເຈົ້າຂອງພວກເຮົາ. ຢ່າໂສກເສົ້າເລີຍ,
ເພາະຄວາມຊົມຊື່ນຍິນດີຂອງພຣະຢາເວເປັນກຳລັງຂອງພວກທ່ານ."
11ແລ້ວຄົນເລວີຈຶ່ງໃຫ້ປະຊາຊົນງຽບ, ແລະບອກວ່າ, "ຈົ່ງງຽບເທີນ! ເພາະວັນນີ້ເປັນວັນບໍຣິສຸດ.
ຢ່າທຸກໂສກເລີຍ."12ແລ້ວປະຊາຊົນທັງປວງຈຶ່ງໄປກິນ ແລະ ດື່ມ ແລະແບ່ງປັນອາຫານ ແລະ ສະຫລອງດ້ວຍຄວາມຊົມຊື່ນຍິນດີເປັນຢ່າງຫລາຍ
ເພາະພວກເຂົາເຂົ້າໃຈຖ້ອຍຄຳທີ່ໄດ້ເປີດເຜີຍໃຫ້ແກ່ພວກເຂົາ.
13ໃນວັນທີສອງ ພວກຜູ້ນຳຂອງເຊື້ອສາຍຂອງບັນພະບູລຸດ ທີ່ມາຈາກປະຊາຊົນທັງປວງ, ພວກປະໂຣຫິດ ແລະ ຄົນເລວີ,
ໄດ້ພ້ອມກັນມາຫາເອຊະຣາ ເພື່ອຈະຮັບຄວາມເຂົ້າໃຈໃນຖ້ອຍຄຳຂອງພຣະບັນຍັດເພີ່ມຕື່ມ.
14ພວກເຂົາພົບຂໍ້ຂຽນໃນພຣະບັນຍັດເຖິງເລື່ອງທີ່ພຣະຢາເວໄດ້ຊົງບັນຊາຜ່ານທາງໂມເຊ
ວ່າປະຊາຊົນອິດສະຣາເອນຄວນຢູ່ໃນເຕັນໃນເດືອນທີເຈັດ.15ພວກເຂົາຄວນອອກໄປປະກາດປ່າວຮ້ອງໃນທຸກເມືອງ, ແລະ ໃນເຢຣູຊາເລັມວ່າ,
"ຈົ່ງອອກໄປທີ່ພູເຂົາ, ນຳກິ່ງໄມ້ຈາກຕົ້ນຫມາກກອກ ແລະຈາກຕົ້ນຫມາກກອກປ່າ ແລະ ຈາກຕົ້ນນ້ຳມັນຂຽວ, ແລະ
ຕົ້ນທີ່ມີໃບດົກຫລາຍກັບມາເຮັດເຕັນ ຕາມທີ່ມີຂຽນໄວ້."
16ດັ່ງນັ້ນ ປະຊາຊົນກໍອອກໄປ ແລະ ນຳກິ່ງໄມ້ຕ່າງໆ ກັບມາ ແລະ ເຮັດເຕັນເພື່ອພວກເຂົາເອງ, ຕາມຫລັງຄາບ້ານຂອງຕົນ,
ຕາມລານບ້ານຂອງຕົນ, ຕາມລານພຣະວິຫານຂອງພຣະເຈົ້າ, ຕາມພື້ນທີ່ໂລ່ງຕໍ່ຫນ້າປະຕູນ້ຳ, ແລະ ໃນລານຈະຕຸລັດທີ່ປະຕູເອຟຣາອິມ.
17ຊຸມນຸມຄົນທັງຫມົດຂອງບັນດາຄົນທີ່ໄດ້ກັບມາຈາກການເປັນຊະເລີຍ ໄດ້ເຮັດເຕັນ ແລະ ໄດ້ພັກຢູ່ໃນເຕັນນັ້ນ.
ເພາະຕັ້ງແຕ່ສະໄຫມຂອງໂຢຊວຍ ລູກຊາຍຂອງນູນຈົນເຖິງວັນນັ້ນ, ປະຊາຊົນອິດສະຣາເອນບໍ່ໄດ້ສະເຫລີມສະຫລອງເທດສະການນີ້,
ດັ່ງນັ້ນຄວາມຊົມຊື່ນຍິນດີຂອງພວກເຂົາຈຶ່ງຍິ່ງໃຫຍ່ເປັນຢ່າງຫລາຍ.
18ດັ່ງນັ້ນໃນແຕ່ລະວັນ, ຈາກມື້ທຳອິດຈົນມື້ສຸດທ້າຍ, ເອຊະຣາ ໄດ້ອ່ານຫນັງສືແຫ່ງພຣະບັນຍັດຂອງພຣະເຈົ້າ.
ພວກເຂົາໄດ້ຖືເທດສະການນັ້ນເປັນເວລາເຈັດວັນ ແລະ ໃນວັນທີແປດໄດ້ມີການປະຊຸມຕາມພິທີການເພື່ອເຮັດຕາມຂໍ້ກຳນົດ.

9 [1]ໃນວັນທີຊາວສີ່ເດືອນດຽວກັນນີ້ ປະຊາຊົນຊາວອິດສະຣາເອນໄດ້ຊຸມນຸມກັນຖືສິນອົດອາຫານ, ແລະ ນຸ່ງຜ້າກະສອບ, ແລະ
ເອົາຂີ້ດິນໃສ່ຫົວຂອງພວກເຂົາ.[2]ເຊື້ອສາຍຂອງອິດສະຣາເອນໄດ້ແຍກພວກຂອງຕົນອອກຈາກຊົນຊາດທັງຫມົດ.
ພວກເຂົາໄດ້ຢືນຂຶ້ນສາລະພາບບາບຂອງຕົນ ແລະການກະທຳອັນຊົ່ວຮ້າຍ ຂອງບັນພະບູລຸດພວກຂອງເຂົາ.

[3]ພວກເຂົາຕ່າງກໍລຸກຂຶ້ນໃນສະຖານທີ່ຂອງຕົນ, ແລະ ອ່ານຈາກຫນັງສືພຣະບັນຍັດຂອງພຣະຢາເວພຣະເຈົ້າຂອງພວກເຂົາ. ຢູ່ສາມຊົ່ວໂມງ
ອີກສາມຊົ່ວໂມງພວກເຂົາສາລະພາບ ແລະກົ້ມຕົວລົງຕໍ່ພຣະພັກພຣະຢາເວພຣະເຈົ້າຂອງພວກເຂົາທັງຫລາຍ.[4]ຊາວເລວີ,
ທີ່ມີຊື່ໄດ້ຢືນຂຶ້ນທີ່ຄັນໄດ, ຄືເຢຊູອາ, ບານີ, ກາດມີເອນ, ເຊບານີຢາ, ບັນນີ, ເຊເຣບີຢາ, ບານີ, ແລະເກນານີ, ແລະ
ພວກເຂົາໄດ້ຮ້ອງດ້ວຍສຽງດັງຕໍ່ພຣະຢາເວພຣະເຈົ້າຂອງພວກເຂົາ.
[5]ແລ້ວຊາວເລວີ, ເຢຊູອາ, ແລະ ກາດມີເອນ, ບານີ, ຮາຊັບເນອີຢາ, ເຊເຣບີຢາ, ໂຮດີຢາ, ເຊບານີຢາ, ແລະ ເປທາຮີຢາ ໄດ້ກ່າວວ່າ, "ຈົ່ງຢືນຂຶ້ນ
ແລະ ສັນລະເສີນພຣະຢາເວພຣະເຈົ້າຂອງພວກເຈົ້າຕະຫລອດໄປ." "ສາທຸການແດ່ພຣະນາມອັນຍິ່ງໃຫຍ່ຂອງພຣະເຈົ້າ, ແລະ
ຂໍພຣະອົງໄດ້ຮັບການຍົກຍ້ອງສັນລະເສີນເຫນືອສິ່ງອື່ນໃດ.[6]ພຣະອົງຄືພຣະຢາເວ. ພຣະອົງອົງດຽວ. ທີ່ໄດ້ຊົງສ້າງຟ້າສະຫວັນ,
ຟ້າສະຫວັນອັນສູງສຸດ, ພ້ອມກັບບໍລິວານທັງຫມົດຂອງຟ້າສະຫວັນນັ້ນ, ແຜ່ນດິນໂລກ ແລະ ບັນດາທຸກສິ່ງທີ່ຢູ່ໃນນັ້ນ ທະເລ ແລະ
ບັນດາທຸກສິ່ງທີ່ຢູ່ໃນນັ້ນ, ແລະພຣະອົງຊົງຮັກສາສິ່ງທັງປວງເຫລົ່ານີ້ໄວ້, ແລະບັນດາຊາວສະຫວັນກໍໄດ້ນະມັດສະການພຣະອົງ.
[7]ພຣະອົງຄືພຣະຢາເວ, ພຣະເຈົ້າຜູ້ຊົງເລືອກອັບຣາມ, ແລະ ຊົງນຳເຂົາອອກມາຈາກເມືອງອູເຣໃນເຄເດັຍ, ແລະ ປະທານນາມວ່າອັບຣາຮາມ.
[8]ເພາະອົງຊົງເຫັນວ່າໃຈຂອງເຂົາຊື່ສັດຕໍ່ພຣະອົງ, ແລະ ພຣະອົງໄດ້ຊົງກະທຳພັນທະສັນຍາກັບເຂົາທີ່ຈະປະທານແຜ່ນດິນຂອງຊາວການາອານ,
ຊາວຮິດຕີ, ຊາວອາໂມ, ຊາວເປຣີຊີ, ຊາວເຢບຸດ, ແລະ ຊາວເກີດກາຊີ ແກ່ເຊື້ອສາຍຂອງເຂົາ. ແລະ
ພຣະອົງຊົງກະທຳໃຫ້ພັນທະສັນຍາຂອງພຣະອົງສຳເລັດ ເພາະພຣະອົງຊົງຊອບທຳ.
[9]ພຣະອົງເຫັນຄວາມທຸກໃຈຂອງບັນພະບູລຸດຂອງພວກຂ້ານ້ອຍໃນເອຢິບ ແລະ ຊົງໄດ້ຍິນສຽງຮ້ອງທຸກຂອງທີ່ທະເລຕົ້ນກົກນັ້ນ.
[10]ພຣະອົງຊົງກະທຳຫມາຍສຳຄັນ ແລະ ການອັດສະຈັນຕໍ່ຕ້ານກະສັດຟາໂຣ, ແລະ ຂ້າຣາຊການບໍລິວານ ແລະ ຕໍ່ປະຊາກອນທັງຫມົດ,
ເພາະພຣະອົງຊົງຮູ້ວ່າຊາວເອຢິບທັງຫລາຍ ໄດ້ປະພຶດຍິ່ງຍະໂສຕໍ່ບັນພະບູລຸດຂອງຂ້ານ້ອຍ.
ແຕ່ພຣະອົງຊົງເຮັດໃຫ້ພຣະນາມຂອງພຣະອົງຊ່າລືໄປດັ່ງທຸກວັນນີ້.
[11]ເມື່ອພຣະອົງໄດ້ຊົງແຍກທະເລ ຕໍ່ຫນ້າພວກເຂົາ, ເພື່ອພວກເຂົາ ໄດ້ຍ່າງໄປກາງທະເລເທິງດິນແຫ້ງ; ແລະ
ພຣະອົງແກວ່ງພວກທີ່ໄລ່ນຳພວກເຂົາລົງໄປໃນທະເລເລິກ ຄືກັບກ້ອນຫີນທີ່ຈົມລົງໄປນ້ຳເລິກ.
[12]ພຣະອົງຊົງນຳພວກເຂົາໃຫ້ພວກເຂົາຍ່າງໄປໃນຕອນເຊົ້າດ້ວຍເສົາເມກ, ແລະໃນກາງຄືນດ້ວຍເສົາໄຟ,
ເພື່ອໃຫ້ຊ່ອງທາງແກ່ພວກເຂົາໃນທາງທີ່ພວກເຂົາຄວນຈະໄປ.[13]ພຣະອົງຊົງສະເດັດມາເທິງພູເຂົາຊີນາຍ ແລະ
ກ່າວກັບພວກເຂົາຈາກຟ້າສະຫວັນ ແລະ ປະທານກົດຫມາຍອັນຊອບທຳ ແລະ ພຣະບັນຍັດທີ່ແທ້ຈິງປະທານກົດເກນ ແລະ
ພຣະບັນຊາທີ່ດີໃຫ້ແກ່ພວກເຂົາ.
[14]ພຣະອົງຊົງໃຫ້ພວກເຂົາຮູ້ເຖິງວັນສະບາໂຕບໍຣິສຸດຂອງພຣະອົງ, ແລະ ຊົງປະທານພຣະບັນຍັດກົດເກນ ແລະ
ພຣະບັນຍັດຫນຶ່ງໃຫ້ແກ່ພວກເຂົາໂດຍຜ່ານທາງໂມເຊຜູ້ຮັບໃຊ້ຂອງພຣະອົງ.[15]ພຣະອົງປະທານອາຫານແກ່ພວກເຂົາຈາກຟ້າສະຫວັນ,
ເພື່ອບັນເທົາຄວາມຫິວ ແລະ ປະທານນ້ຳທີ່ອອກມາຈາກຫີນເພື່ອດັບຄວາມກະຫາຍຂອງພວກເຂົາ ແລະ
ພຣະອົງຊົງກ່າວຕໍ່ພວກເຂົາໃຫ້ເຂົາໄປຢຶດແຜ່ນດິນຊຶ່ງພຣະອົງຊົງສັນຍາວ່າຈະປະທານໃຫ້ພວກເຂົາ.
[16]ແຕ່ພວກເຂົາ ແລະ ບັນພະບູລຸດຂອງພວກຂ້ານ້ອຍໄດ້ກະທຳສິ່ງທີ່ດູຫມິ່ນ, ແລະ ພວກເຂົາດື້ດ້ານ, ແລະ
ບໍ່ຟັງຄຳບັນຊາທັງຫລາຍຂອງພຣະອົງ.[17]ພວກເຂົາປະຕິເສດທີ່ຈະຟັງ, ແລະ ບໍ່ໃສ່ໃຈກັບການອັດສະຈັນຊຶ່ງພຣະອົງກະທຳຂຶ້ນທ່າມກາງພວກເຂົາ,
ແຕ່ພວກເຂົາດື້ດ້ານ, ແລະ ໃນຄວາມກະບົດຂອງພວກເຂົານັ້ນ ພວກເຂົາໄດ້ແຕ່ງຕັ້ງຫົວຫນ້າຄົນຫນຶ່ງເພື່ອຈະກັບໄປສູ່ຄວາມເປັນທາດ.
ແຕ່ພຣະອົງຊົງເປັນພຣະເຈົ້າຜູ້ຊົງເຕັມໄປດ້ວຍການອະໄພໂທດ, ພຣະຄຸນ, ແລະພຣະກາລຸນາ, ຊົງໂມໂຫຊ້າ, ແລະ
ຊົງອຸດົມໄປດ້ວຍຄວາມຮັກຫມັ້ນຄົງ. ແລະ ບໍ່ໄດ້ຊົງຖິ້ມພວກເຂົາ.
[18]ເຖິງວ່າພວກເຂົາໄດ້ຫລໍ່ງົວໂຕຫນຶ່ງຈາກໂລຫະຫລອມລະລາຍແລະກ່າວວ່າ "ນີ້ທີ່ພະເຈົ້າຂອງພວກເຈົ້າຜູ້ທີ່ ນຳພວກເຈົ້າອອກມາຈາກເອຢິບ"
ແລະ ໄດ້ທຳການຫມິ່ນປະຫມາດຢ່າງໃຫຍ່ຫລວງ,[19]ດ້ວຍພະເມດຕາກະລຸນາຂອງພຣະອົງ, ພຣະອົງກໍບໍ່ໄດ້ຊົງຖິ້ມເຂົາໃນຖິ່ນທຸລະກັນດານ.
ເສົາເມກຊຶ່ງນຳພວກເຂົາໃນກາງເວັນບໍ່ໄດ້ພາກຈາກເຂົາໄປ, ຫລື ເສົາໄຟຊຶ່ງສ່ອງທາງໃຫ້ພວກເຂົາຍ່າງໄປ.
[20]ພຣະອົງປະທານພຣະວິນຍານອັນປະເສີດໃຫ້ສັ່ງສອນພວກເຂົາ, ແລະ
ບໍ່ໄດ້ຊົງຢັບຢັ້ງມານາຂອງພຣະອົງເສຍຈາກປາກຂອງພວກເຂົາແລະປະທານນ້ຳເພື່ອດັບຫິວກະຫາຍໃຫ້ແກ່ພວກເຂົາ.
[21]ເປັນເວລາສີ່ສິບປີທີ່ພຣະອົງຊົງລ້ຽງດູເຂົາທັງຫລາຍໃນຖິ່ນທຸລະກັນດານ, ແລະ ພວກເຂົາບໍ່ຂາດສິ່ງໃດເລີຍເສື້ອຜ້າຂອງພວກເຂົາບໍ່ຂາດ
ແລະຕີນຂອງພວກເຂົາກໍບໍ່ໄດ້ບວມ.
[22]ພຣະອົງຊົງມອບອານາຈັກ ແລະ ຊົນຊາດທັງຫລາຍແກ່ພວກເຂົາ, ຊົງກຳນົດຫົວທຸກດິນແດນໃຫ້ແກ່ພວກເຂົາ.
ແລ້ວພວກເຂົາຈຶ່ງໄດ້ຢຶດແຜ່ນດິນຂອງກະສັດແຫ່ງເມືອງບາຊານ.
[23]ພຣະອົງຊົງໃຫ້ພວກເພີ່ນຊະນະເຫນືອຊົນຊາດກັບອານາຈັກຂອງພວກເຂົາຢ່າງຫລາຍເຫນືອດວງດາວເທິງຟ້າສະຫວັນ
ແລະພຣະອົງຊົງນຳພວກເຂົາເຂົ້າໄປໃນແຜ່ນດິນ ຊຶ່ງພຣະອົງຊົງບອກແກ່ບັນພະບູລຸດຂອງພວກເຂົາໃຫ້ເຂົ້າໄປຢຶດນັ້ນ.
[24]ດັ່ງນັ້ນຜູ້ຄົນເຫລົ່ານັ້ນຈຶ່ງເຂົ້າໄປ ແລະຢຶດຄອງແຜ່ນດິນນັ້ນ,
ພຣະອົງຊົງປາບປາມຜູ້ທີ່ຊົງຢູ່ທີ່ເມືອງນັ້ນຄືຊາວການາອານຕໍ່ຫນ້າຕໍ່ຕາຂອງພວກເຂົາ, ແລະ ຊົງມອບຄົນເຫລົ່ານັ້ນໄວ້ໃນມືຂອງພວກເຂົາ,
ພ້ອມກັບກະສັດ ແລະຊົນຊາດທັງຫລາຍແຫ່ງແຜ່ນດິນນັ້ນເພື່ອຊາວອິດສະຣາເອນຈະເຮັດສິ່ງໃດຕາມໃຈມັກກັບຄົນເຫລົ່ານັ້ນໄດ້.
[25]ພວກເຂົາເຂົ້າຢຶດເມືອງທີ່ມີປ້ອມປາການ ແລະ ແຜ່ນດິນອັນອຸດົມສົມບູນ, ແລະ ພວກເຂົາຢຶດເອົາບ້ານເຮືອນຊຶ່ງເຕັມໄປດ້ວຍຂອງດີທຸກຢ່າງ,
ລວມທັງບໍ່ນ້ຳທີ່ສະກັດໄວ້, ສວນອະງຸ່ນ, ສວນຫມາກກອກ ແລະ ເຄື່ອງປູກຂອງຝັງຫລາຍ ພວກເຂົາຈຶ່ງໄດ້ກິນອີ່ມສົມບູນ
ແລະປິຕິຍິນດີໃນພຣະຄຸນຂອງພຣະອົງ.

[26]ແຕ່ພວກເພິ່ນຄຶດຄົດ ແລະ ບໍ່ເຊື່ອຟັງພຣະອົງ ແລະ ພວກເຂົາຖິ້ມສັນຍາຂອງພຣະອົງໄວ້ເບື້ອງຫລັງ.
ພວກເຂົາໄດ້ຂ້າຜູ້ເຜີຍພຣະວັດຈະນະຂອງພຣະອົງ, ຜູ້ໄດ້ຕັກເຕືອນພວກເຂົາເພື່ອໃຫ້ພວກເຂົາກັບມາຫາພຣະອົງ, ແລະ
ພວກເຂົາເຮັດການຫມິ່ນປະຫມາດຢ່າງໃຫຍ່.[27]ເພາະສະນັ້ນພຣະອົງຊົງມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ, ຜູ້ເຮັດໃຫ້ພວກເຂົາທົນທຸກ,
ແລະໃນເວລາແຫ່ງການທົນທຸກຂອງພວກເຂົາ, ພວກເຂົາຮ້ອງທູນຕໍ່ພຣະອົງ, ແລະ
ພຣະອົງຊົງຟັງພວກເຂົາຈາກຟ້າສະຫວັນພຣະອົງຊົງປະທານບັນດາຜູ້ຊ່ວຍແກ່ພວກເຂົາໃຫ້ລອດພົ້ນຈາກເງື້ອມມືຂອງບັນດາສັດຕູທັງຫລາຍຂອງພວກເຂົາ.
[28]ແຕ່ເມື່ອພວກເຂົາພັກສະຫງົບແລ້ວ, ພວກເຂົາກໍເຮັດຊົ່ວຕໍ່ພຣະພັກຂອງພຣະອົງອີກ, ແລະ ພຣະອົງຈຶ່ງຖິ້ມພວກເຂົາໄວ້ໃນມືສັດຕູທັງຫລາຍ,
ດັ່ງນັ້ນສັດຕູຈຶ່ງໄດ້ປົກຄອງເຫນືອພວກເຂົາ. ທັນໃດນັ້ນເມື່ອພວກເຂົາຫັນມາຮ້ອງທູນຕໍ່ພຣະອົງ, ພຣະອົງຈຶ່ງຟັງພວກເຂົາຈາກຟ້າສະຫວັນ
ແລະພຣະອົງຊ່ວຍກູ້ພວກເຂົາໄວ້ຫລາຍຄັ້ງຫລາຍເທື່ອ
ຕາມພຣະກະລຸນາຂອງພຣະອົງ[29]ພຣະອົງຊົງຕັກເຕືອນພວກເຂົາເພື່ອພວກເຂົາຈະຫັນມາຫາພະສັນຍາຂອງພຣະອົງ.
ແຕ່ພວກເຂົາຍັງປະພຶດອວດດີບໍ່ຍອມຟັງພຣະບັນຊາຂອງພຣະອົງ.
ແຕ່ໄດ້ເຮັດຜິດຕໍ່ກົດຫມາຍຂອງພຣະອົງຊຶ່ງໃຫ້ຊີວິດແກ່ທຸກຄົນທີ່ເຮັດຕາມພວກເຂົາຄືດ້ານຫົວແຂງ ແລະປະຕິເສດທີ່ຈະຟັງ.
[30]ພຣະອົງຊົງອົດທົນກັບພວກເຂົາຢູ່ຫລາຍປີ ແລະ ຊົງເຕືອນພວກເຂົາດ້ວຍພຣະວິນຍານຂອງພຣະອົງຜ່ານຜູ້ເຜີຍພຣະວັດຈະນະຂອງພຣະອົງ.
ພວກເຂົາບໍ່ຍອມຟັງ ເພາະສະນັ້ນພຣະອົງຊົງມອບພວກເຂົາໄວ້ໃນມືຂອງພວກຊົນຊາດເພື່ອນບ້ານທັງຫລາຍ.
[31]ແຕ່ດ້ວຍພຣະເມດຕາກະລຸນາເຫລືອລົ້ນຂອງພຣະອົງ ພຣະອົງບໍ່ໄດ້ເຮັດໃຫ້ເຂົາພິນາດ ຫລືຖິ້ມພວກເຂົາເລີຍ
ຂ້າແຕ່ພຣະເຈົ້າຂອງຂ້ານ້ອຍທັງຫລາຍຊຶ່ງເປັນພຣະເຈົ້າຜູ້ຊົງມີພຣະຄຸນແລະພຣະກະລຸນາ
[32]ດ້ວຍເຫດນີ້, ພຣະເຈົ້າຂອງພວກເຮົາ - ພຣະອົງຊົງເປັນພຣະເຈົ້າທີ່ຍິ່ງໃຫຍ່, ຊົງສະຖິດແລະ ຫນ້າຢຳເກງ ຜູ້ຊົງຮັກສາພັນທະສັນຍາ
ແລະຄວາມຮັກຫມັ້ນຄົງ - ສະນັ້ນລ້ວນເປັນສິ່ງເລັກນ້ອຍຊຶ່ງບັງເກີດຂຶ້ນກັບຂ້ານ້ອຍ ກັບບັນດາກະສັດຂອງຂ້ານ້ອຍ, ກັບບັນດາເຈົ້າເມືອງ,
ບັນດາປະໂຣຫິດ, ບັນດາຜູ້ເຜີຍພຣະວັດຈະນະ, ບັນພະບູລຸດ ແລະ ຊົນຊາດຂອງພຣະອົງທັງສິ້ນ. ຕັ້ງແຕ່ສະໄຫມກະສັດອີເຣຍຈົນເຖິງວັນນີ້,
[33]ທຸກສິ່ງທີ່ບັງເກີດຂຶ້ນກັບຂ້ານ້ອຍທັງຫລາຍນັ້ນລ້ວນແຕ່ເປັນມາຈາກພຣະອົງ,ເພາະພຣະອົງຊົງປະຕິບັດຢ່າງທ່ຽງທຳ
ແຕ່ຂ້ານ້ອຍທັງຫລາຍປະພຶດຢ່າງອະທຳ.[34]ບັນດາກະສັດ,ເຈົ້າເມືອງ, ປະໂຣຫິດ ແລະ
ບັນພະບູລຸດຂອງຂ້ານ້ອຍທັງຫລາຍບໍ່ໄດ້ຮັກສາພຣະສັນຍາ ຫລືໃສ່ໃຈຕໍ່ພັນທະສັນຍາຂອງພຣະອົງ ຫລື
ຕໍ່ກົດເກນແຫ່ງພັນທະສັນຍາຂອງພຣະອົງຊຶ່ງພຣະອົງຊົງເຕືອນພວກເຂົາ.
[35]ແມ່ນວ່າ ໃນອານາຈັກຂອງຕົນ, ຂະນະທີ່ພວກເຂົາມີຄວາມສຸກກັບຄວາມດີອັນຍິ່ງໃຫຍ່, ແລະ ໃນແຜ່ນດິນກວ້າງໃຫຍ່
ແລະອຸດົມສົມບູນທີ່ພຣະອົງຕັ້ງໄວ້ຕໍ່ຫນ້າພວກເຂົາ, ແຕ່ພວກເຂົາບໍ່ໄດ້ປະຕິບັດຕາມພຣະອົງ ຫລື ຫັນກັບມາວິຖີທາງອັນຊົ່ວຮ້າຍຂອງພວກເຂົາ.
[36]ບັດນີ້ຂ້ານ້ອຍທັງຫລາຍເປັນທາດຢູ່ໃນແຜ່ນດິນທີ່ພຣະອົງຊົງປະທານແກ່ບັນພະບູລຸດຂອງພວກຂ້ານ້ອຍທັງຫລາຍ ເພື່ອໃຫ້ພືດຜົນງອກງາມດີ,
ກັບຂອງກິນອັນດີຂອງມັນ, ແລະ ແຕ່ເບິ່ງໂລດ ພວກຂ້ານ້ອຍກັບເປັນທາດ![37]ຜົນຜະລິດທີ່ອຸດົມສົມບູນຈາກແຜ່ນດິນຂອງຂ້ານ້ອຍ ເຖິງກະສັດ
ເພາະບາບຂອງຂ້ານ້ອຍທັງຫລາຍ. ພວກເຂົາມີອຳນາດເຫນືອຮ່າງກາຍ ແລະ
ເຫນືອຝູງສັດລ້ຽງຂອງຂ້ານ້ອຍທັງຫລາຍຕາມຄວາມພໍໃຈຂອງພວກເຂົາ ແລະ ພວກຂ້ານ້ອຍທັງຫລາຍກໍເປັນທຸກໃຫຍ່.
[38]ດ້ວຍເຫດນີ້ພຣະອົງຈຶ່ງເຮັດພັນທະສັນຍາໄວ້ເພື່ອເປັນອັກສອນ. ໃນຫນັງສືທີ່ປະທັບຕາເປັນຊື່ຂອງເຈົ້າເມືອງຊາວເລວີ ແລະ ປະໂຣຫິດແລະ
ເຈົ້າຊາຍຂອງພວກຂ້ານ້ອຍທັງຫລາຍ.


generated on Tue Jun 17 19:01:42 2025

10 1ບັນດາຜູ້ປະທັບຕາໃນໜັງສືນີ້ຄື ເນເຫມີຢາ, ຜູ້ວ່າຣາຊການ, ຜູ້ເປັນພີ່ນ້ອງຂອງຮາກາຣີຢາ ແລະ ເຊເດກີຢາ,2ເສຣາອີຢາ, ອາຊາຣີຢາ,
ເຢເຣມີຢາ,3ປັດຊູ, ອາມາຣີຢາ, ມັນກີຢາ,

4 ຮັດຕຸຊະ, ເຊບານີຢາ, ມັນລຸກ,5ເມເຣໂມດ, ໂອບາດີຢາ,6ດານີເອນ, ຄິນເນໂທນ, ບາຣຸກ,7ເມຊຸນລຳ, ອາບີຢາ, ມີຢາມິນ,8ມາອາຊີຢາບິນກາຍ,
ແລະ ເຊມາອີຢາ. ຄົນເຫລົ່ານີ້ເປັນປະໂຣຫິດ.
9ພວກຄົນເລວີຄື: ເຢຊູອາຜູ້ເປັນບຸດອາຊານີຢາ, ບິນນູອີຄົນ, ໃນຕະກຸນຂອງເຮນາດາດ, ກາດມີເອນ,10ແລະ ພວກຄົນຊາວເລວີຂອງພວກເຂົາ,
ເຊບານີຢາ, ໂຮດີຢາ, ເກລີຕາ, ເປລາອີຢາ, ຮານານ,11ມີກາ, ເຣໂຮບ, ຮາຊາບີຢາ,12ຊັກກູເຣ, ເຊເຣບີຢາ,13ໂຮດີຢາ, ບານີ, ແລະ ເບນີນູ.
14ບັນດາຜູ້ນຳປະຊາຊົນ ຄື: ປາຣົດ, ປາຮາດ ໂມອາບ, ເອລາມ, ຊັດຕຸ, ບານີ,
15ບັນນີ, ອາຊະກາດ, ເບບາຍ,16ອາໂດນີຢາ, ບິກໄວ, ອາດິນ,17ອາເຕ, ເຮເຊກີຢາ, ອັດຊູຣະ,18ໂຮດີຢາ, ຮາຊຸມ, ເບໄຊ,19ຮາຣິບ, ອານາທົດ,
ເນບາຍ,20ມາກປີອັດຊະ, ເມຊຸນລຳ, ເຮຊີຣະ,21ເມເຊຊາເບນ, ຊາດົກ, ຢັດດູອາ,
22 ເປລາຕີຢາ, ຮານານ, ອານາອີຢາ,23ໂຮເຊຢາ, ຮານານີຢາ, ຮັດຊຸບ,24ຮັນໂລເຮັດ, ປິນຮາ, ໂຊເບັກ,25ເຣຮຸມ, ຮາຊັບນາ, ມາອາເສອີຢາ,
26ອາຮີຢາ, ຮານານ, ອານານ,27ມັນລຸກ, ຮາຣິມ, ແລະ ບາອານາ.
28ສ່ວນພວກທີ່ເຫລືອຢູ່ເປັນພວກປະໂຣຫິດ, ພວກເລວີ, ຄົນເຝົ້າປະຕູ, ຄະນະນັກຮ້ອງ, ຄົນຮັບໃຊ້ໃນພຣະວິຫານ, ແລະ
ທຸກຄົນທີ່ໄດ້ແຍກຕົວເອງອອກຈາກຊົນຊາດໃນແຜ່ນດິນທີ່ຢູ່ໃກ້ຄຽງນັ້ນ ແລະ ປະຕິຍານຕົນຕໍ່ພຣະສັນຍາຂອງພຣະເຈົ້າ, ລວມທັງບັນດາເມຍ,
ຂອງລູກຊາຍ ແລະ ຍິງຂອງພວກເຂົາ, ທຸກຄົນທີ່ມີຄວາມຮູ້ ແລະ ເຂົ້າໃຈ,29ພວກເຂົາໄດ້ຮ່ວມກັນເຂົ້າກັບອ້າຍນ້ອງ, ຂຸນນາງຂອງພວກເຂົາ,
ແລະ ຮັບການສາບານຕົນ ແລະ ປະຕິຍານທີ່ຈະດຳເນີນໃນພະສັນຍາຂອງພຣະເຈົ້າ, ທີ່ໄດ້ຮັບມອບຈາກໂມເຊຜູ້ຮັບໃຊ້ຂອງພຣະເຈົ້າ, ແລະ
ທີ່ຮັກສາ ແລະເຮັດຕາມພະສັນຍາຂອງພຣະຢາເວຈອມເຈົ້ານາຍຂອງພວກເຮົາ ແລະ ຕາມກົດຫມາຍແລະກົດເກນຂອງພຣະອົງ.
30ພວກເຮົາສັນຍາວ່າເຮົາຈະບໍ່ຍົກລູກຜູ້ຍິງຂອງເຮົາໃຫ້ແກ່ຄົນໃນແຜ່ນດິນນັ້ນ ຫລື ບໍ່ຮັບລູກຜູ້ຍິງຂອງພວກເຂົາມາໃຫ້ລູກຊາຍຂອງເຮົາ.
31ເຮົາສັນຍາດ້ວຍວ່າ ຖ້າຄົນຂອງແຜ່ນດິນນັ້ນນຳສິນຄ້າ ຫລືເມັດເຂົ້າໃດໆ ມາຂາຍໃນວັນສະບາໂຕ, ເຮົາຈະບໍ່ຊື້ຈາກພວກເຂົາໃນວັນສະບາໂຕ
ຫລືວັນບໍຣິສຸດອື່ນໆ. ເຮົາຈະໃຫ້ທົ່ງນາໄດ້ຢຸດພັກທຸກປີທີເຈັດ, ແລະ ພວກເຮົາຈະຍົກຫນີ້ສິນທັງຫມົດທີ່ພວກຢິວບາງຄົນໄດ້ເຮັດສັນຍາໄວ້.
32ພວກເຮົາຍອມຮັບພະບັນຊາ ໃນການຖວາຍສ່ວນຫນຶ່ງໃນສາມສ່ວນໃນແຕ່ລະປີ ເພື່ອປະຕິບັດໃນພຣະວິຫານຂອງພຣະເຈົ້າ,
33ເພື່ອຈັດໃຫ້ມີເຂົ້າຈີ່ຫນ້າພຣະພັກ, ແລະ ເພື່ອບູຊາເປັນປະຈຳ, ເຄື່ອງເຜົາບູຊາໃນວັນສະບາໂຕ, ເທດສະການຂຶ້ນຫນຶ່ງຄ່ຳ, ແລະ
ເທດສະການງານລ້ຽງທີ່ກຳນົດໄວ້, ແລະ ເພື່ອເຄື່ອງບູຊາບໍຣິສຸດ ແລະເພື່ອເຄື່ອງບູຊາລົບລ້າງບາບ
ເພື່ອເຮັດການລົບລ້າງມົນທິນບາບໃຫ້ກັບອິດສະຣາເອນ, ແລະ ເພື່ອງານທຸກຢ່າງໃນພຣະວິຫານຂອງພຣະເຈົ້າຂອງພວກເຮົາດ້ວຍ.
34ພວກປະໂຣຮິດ, ພວກເລວີ, ແລະປະຊາຊົນໄດ້ຈັບສະຫລາກເພື່ອຖວາຍຟືນ.
ການຈັບສະຫລາກເພື່ອທີ່ຈະເລືອກວ່າເຜົ່າໃດໃນເຊື້ອຊາດຂອງເຮົາຈະນຳຟືນມາໃຫ້ພຣະວິຫານຂອງພຣະເຈົ້າຕາມເວລາທີ່ກຳນົດໄວ້ໃນແຕ່ລະປີ,
ເພື່ອເຜົາເທິງແທ່ນບູຊາຂອງພຣະຢາເວພຣະເຈົ້າຂອງເຮົາ, ຕາມທີ່ໄດ້ຂຽນໄວ້ໃນກົດບັນຍັດ.
35ເຮົາສັນຍາວ່າຈະນຳຜົນທຳອິດທີ່ເກີດຈາກດິນຂອງເຮົາ ແລະ ຜົນທຳອິດຂອງຕົ້ນໄມ້ທຸກຕົ້ນໃນແຕ່ລະປີ
ມາຍັງພຣະວິຫານຂອງພຣະຢາເວ36ດັ່ງທີ່ມີຂຽນໄວ້ໃນກົດຫມາຍ, ພວກຂ້ານ້ອຍຍັງຈະຖວາຍລູກກົກ ແລະ ລູກຫົວປີຂອງຝູງແບ້ແກະ
ມາຍັງພຣະວິຫານຂອງພຣະເຈົ້າ, ແລະມາຍັງປະໂຣຫິດ.
37ພວກເຮົາຈະນຳສ່ວນທຳອິດຂອງເຂົ້າຈີ່ ແລະ ຜົນຈາກຕົ້ນໄມ້ທຸກຕົ້ນ, ແລະ ເຫລົ້າອະງຸ່ນແລະ ນ້ຳມັນມາ ພວກເຮົາຈະນຳມາຍັງປະໂຣຫິດ,
ມາຍັງຫ້ອງຄັງພຣະວິຫານຂອງພຣະເຈົ້າຂອງເຮົາ. ພວກເຮົາຈະນຳຄັງຜົນຈາກພື້ນດິນຂອງເຮົາມາໃຫ້ແກ່ພວກເລວີ
ເພາະພວກເລວີເກັບຄັງໄວ້ທຸກເມືອງທີ່ເຮົາເຮັດວຽກ.38ປະໂຣຫິດເປັນເຊື້ອສາຍຂອງອາໂຣນຕ້ອງຢູ່ກັບພວກເລວີ ເມື່ອພວກເຂົາຮັບຄັງ.
ຄົນເລວີຕ້ອງນຳສິບລົດຂອງຄັງມາໄວ້ທີ່ພຣະນິເວດຂອງພຣະເຈົ້າເພື່ອເກັບໄວ້ຫ້ອງຄັງສົມບັດ.
39ເພາະຄົນອິດສະຣາເອນ ແລະລູກຫລານຂອງຄົນເລວີຈະນຳຂອງຖວາຍທີ່ເປັນເຫລົ້າອະງຸ່ນໃຫມ່, ແລະ
ນ້ຳມັນມາເກັບໄວ້ທີ່ຫ້ອງຄັງທີ່ເກັບເຄື່ອງໃຊ້ໃນການນະມັດສະການ ແລະ ເປັນຂອງປະໂຣຫິດຜູ້ທີ່ເປັນຄົນຮັບໃຊ້ພຣະເຈົ້າ, ແລະ ຄົນເຝົ້າປະຕູ,
ແລະນັກຮ້ອງຢູ່ເຮົາຈະບໍ່ເພີກເສີຍຕໍ່ພຣະວິຫານຂອງພຣະເຈົ້າຂອງພວກເຮົາ.


generated on Tue Jun 17 19:01:42 2025

# 11

[1]ຜູ້ນໍາຂອງປະຊາຊົນໄດ້ອາໄສຢູ່ໃນນະຄອນເຢຣູຊາເລັມ, ແລະ ປະຊາຊົນທີ່ເຫລືອໄດ້ຈັບສະຫລາກກັນ
ເພື່ອຈະເລືອກຄົນຫນຶ່ງໃນສິບໃຫ້ຢູ່ໃນນະຄອນເຢຣູຊາເລັມ, ນະຄອນສັກສິດ, ແລະທີ່ເຫລືອອີກເກົ້າສ່ວນໃຫ້ໄປອາໄສໃນເມືອງອື່ນໆ.
[2]ຈາກນັ້ນປະຊາຊົນກໍໄດ້ອວຍພອນຄົນທັງຫມົດທີ່ເຕັມໃຈສະເຫນີໂຕທີ່ຈະຢູ່ໃນນະຄອນເຢຣູຊາເລັມ.

[3]ເຫລົ່ານີ້ຄືເຈົ້າຫນ້າທີ່ແຂວງທັງຫລາຍທີ່ອາໄສຢູ່ໃນນະຄອນເຢຣູຊາເລັມ. ຢ່າງໃດກໍດີ, ໃນເມືອງຕ່າງໆ ຂອງຢູດາ
ທຸກຄົນກໍອາໄສຢູ່ໃນທີ່ດິນຂອງຕົນ, ລວມທັງພວກອິດສະຣາເອນບາງສ່ວນ, ພວກປະໂຣຫິດ, ພວກເລວີ, ພວກຄົນຮັບໃຊ້ໃນພຣະວິຫານ, ແລະ
ພວກເຊື້ອສາຍທັງຫລາຍຂອງພວກຄົນຮັບໃຊ້ໂຊໂລໂມນ.
[4]ເຊື້ອສາຍບາງສ່ວນຂອງຢູດາຍກໍໄດ້ອາໄສຢູ່ໃນເມືອງເຢຣູຊາເລັມທີ່ເປັນສົມບັດຂອງພວກເຂົາ. ປະຊາຊົນຈາກຢູດາຍລວມທັງ:
ອາທາອີຢາລູກຂອງອຸດຊີຢາ ຜູ້ເປັນລູກຂອງເຊກາຣີຢາ ຜູ້ເປັນລູກຂອງອາມາຣີຢາ ຜູ້ເປັນລູກຂອງເຊຟາຕີຢາ ຜູ້ເປັນລູກຂອງມະຫາລາເລນ,
ເຊື້ອສາຍຄົນຫນຶ່ງຂອງເປເຣັດ.
[5]ມາອາເສອີຢາລູກຂອງບາຣຸກ ຜູ້ເປັນລູກຂອງໂຮເຊ ຜູ້ເປັນລູກຂອງຮາຊາອີຢາ ຜູ້ເປັນລູກຂອງອາດາອີຢາ ຜູ້ເປັນລູກຂອງໂຢອີອາຣິບ
ຜູ້ເປັນລູກຂອງເຊກາຣີຢາ, ຜູ້ເປັນລູກຂອງເຊລາ.[6]ລູກທັງຫມົດຂອງເປເຣັດຜູ້ທີ່ໄດ້ອາໄສຢູ່ໃນນະຄອນເຢຣູຊາເລັມມີທັງຫມົດ 468 ຄົນ.
ພວກເຂົາເປັນຄົນໂດດເດັ່ນ.
[7]ເຫລົ່ານີ້ແມ່ນເຊື້ອສາຍຂອງເບັນຢາມິນຄື: ສານລູລູກຂອງເມຊຸນລໍາ, ຜູ້ເປັນລູກຂອງໂຢເອັດ ຜູ້ເປັນລູກຂອງເປດາອີຢາ,
ຜູ້ເປັນລູກຂອງໂກລາອີຢາ, ຜູ້ເປັນລູກຂອງມາອາເສອີຢາ ຜູ້ເປັນລູກຂອງອີທີເອນ ຜູ້ເປັນລູກຂອງເຢຊາອີຢາ,[8]ແລະຄົນເຫລົ່ານັ້ນທີ່ຕິດຕາມເຂົາ,
ຄືກັບໄບ ແລະສານໄລ, ມີ 928 ຄົນ.[9]ໂຢເອນລູກຂອງຊີກະຣີເປັນຜູ້ດູແລຂອງພວກເຂົາ, ແລະ
ມີຢູດາລູກຂອງຮັດເສນູຢາເປັນຮອງຜູ້ປົກຄອງເມືອງ.
[10]ຈາກພວກປະໂຣຫິດຄື: ເຢດາອີຢາລູກຊາຍຂອງໂຢອີອາຣິບ, ແລະ ຢາກິນ,[11]ເສຣາອີຢາລູກຊາຍຂອງຮິນກີຢາ ຜູ້ເປັນລູກຂອງເມຊຸນລໍາ,
ຜູ້ເປັນລູກຂອງຊາດົກ ຜູ້ເປັນລູກຂອງເມຣາອີຢົດ ຜູ້ເປັນລູກຂອງອາຮີຕຸບ, ຫົວຫນ້າເຈົ້າຫນ້າທີ່ຂອງພຣະວິຫານຂອງພຣະເຈົ້າ,[12]ແລະ
ພວກພີ່ນ້ອງຂອງພວກເຂົາ ຜູ້ທີ່ເຮັດວຽກງານສໍາລັບພຣວິຫານ ຈໍານວນ 822 ຄົນ, ພ້ອມດ້ວຍອາດາອີຢາລູກຂອງເຢໂຣຮາມ
ຜູ້ເປັນລູກຂອງເປລາລີຢາ ຜູ້ເປັນລູກຂອງອາມຊີ ຜູ້ເປັນລູກຂອງເຊກາຣີຢາ ຜູ້ເປັນລູກຂອງປັດຊູ ຜູ້ເປັນລູກຂອງມັນກີຢາ.
[13]ພວກພີ່ນ້ອງຂອງເຂົາເປັນຫົວຫນ້າຂອງຕະກູນ, ມີກໍາລັງຄົນ 242 ຄົນ; ແລະ ອາມັດໄສລູກຂອງອາຊາເຣນ ຜູ້ເປັນລູກຂອງອາຮະໄຊ
ຜູ້ເປັນລູກຂອງເມຊິນເລໂມດ ຜູ້ເປັນລູກຂອງອິມເມ,[14]ແລະ ພີ່ນ້ອງຂອງພວກເຂົາຈໍານວນ 128; ເປັນຜູ້ຊາຍທີ່ກ້າຫານໃນການຕໍ່ສູ້
ຜູ້ທີ່ເບິ່ງແຍງພວກເຂົາຄື ຊັບດີເອນ ລູກຊາຍຂອງ ຮັກເກໂດລິມ.
[15]ຈາກພວກເລວີ: ເຊມາອີຢາລູກຂອງຮັດຊຸບ ຜູ້ເປັນລູກຂອງອາຊະຣີກໍາ ຜູ້ເປັນລູກຂອງຮາຊາບີຢາ ຜູ້ເປັນລູກຂອງບັນນີ,
[16]ແລະຊັບເບທາຍກັບໂຢຊາບັດ, ຜູ້ຊຶ່ງມາຈາກພວກຜູ້ນໍາຂອງພວກເລວີ ແລະ ເປັນຜູ້ຄວບຄຸມງານພາຍນອກພຣະວິຫານຂອງພຣະເຈົ້າ.
[17]ມັດຕານີຢາລູກຂອງມີກາ ຜູ້ເປັນລູກຂອງຊັບດີ, ຜູ້ເປັນເຊື້ອສາຍຄົນຫນຶ່ງຂອງອາສັບ, ເປັນຜູ້ຄວບຄຸມ
ຜູ້ທີ່ໄດ້ເລີ່ມການຂອບພຣະຄຸນໃນການອະທິຖານ, ແລະ ບັກບຸກີຢາ, ຜູ້ເປັນທີສອງທ່າມກາງພວກພີ່ນ້ອງຂອງເຂົາ, ແລະ
ອັບດາລູກຂອງຊາມມູອາ ຜູ້ເປັນລູກຂອງກາລານ ຜູ້ເປັນລູກຂອງເຢດູທູນ.[18]ພວກເລວີທັງຫມົດໃນນະຄອນສັກສິດມີຈໍານວນ 284 ຄົນ.
[19]ຄົນເຝົ້າປະຕູຄື: ອັກກຸບ, ຕານໂມນ, ແລະ ພວກພີ່ນ້ອງຂອງພວກເຂົາ, ຜູ້ເຝົ້າລະວັງປະຕູທັງຫລາຍ, ມີຈໍານວນ 172 ຄົນ.[20]ຄົນອິດສະຣາເອນ
ແລະ ປະໂຣຫິດທັງຫລາຍ ແລະຄົນເລວີທັງຫລາຍທີ່ເຫລືອຢູ່ໃນເມືອງທັງຫລາຍຂອງຢູດາ. ທຸກຄົນອາໄສຢູ່ໃນທີ່ດິນມໍລະດົກຂອງເຂົາ.
[21]ຄົນເຮັດວຽກຂອງພຣະວິຫານອາໄສຢູ່ໃນໂອເຟນ, ແລະ ຊີຮາກັບກີຊະປາ ເປັນຄົນຄວບຄຸມຂອງພວກເຂົາ.
[22]ຫົວຫນ້າຄົນເບິ່ງແຍງຄົນເລວີໃນນະຄອນເຢຣູຊາເລັມຄື ອຸດຊີລູກຂອງບານີ ຜູ້ເປັນລູກຂອງຮາຊາບີຢາ ຜູ້ເປັນລູກຂອງມັດຕານີຢາ
ຜູ້ເປັນລູກຂອງມີກາ, ເຊື້ອສາຍທັງຫລາຍຂອງອາສາບ, ພວກນັກຮ້ອງເບິ່ງແຍງງານໃນພຣະວິຫານຂອງພຣະເຈົ້າ.
[23]ພວກເຂົາຢູ່ໃຕ້ຄໍາສັ່ງຂອງກະສັດ, ແລະ ມີຄໍາສັ່ງຢ່າງຫນັກແຫນ້ນໃຫ້ກັບພວກນັກຮ້ອງເປັນປະຈໍາວັນຕາມທີ່ຕ້ອງການ.
[24]ສ່ວນເປທາຮີຢາລູກຂອງເມເຊຊາເບັນ, ເຊື້ອສາຍຄົນຫນຶ່ງຂອງເຊຣາ ຜູ້ເປັນລູກຊາຍຢູດາ, ເປັນມະຫາດເລັກຢູ່ຂ້າງໆ
ກະສັດໃນທຸກເລື່ອງທີ່ກ່ຽວຂ້ອງກັບປະຊາຊົນ.
[25]ສ່ວນຫມູ່ບ້ານທັງຫລາຍ ແລະ ໄຮ່ນາທັງຫລາຍຂອງຫມູ່ບ້ານເຫລົ່ານັ້ນ, ປະຊາຊົນຂອງຢູດາບາງສ່ວນອາໄສໃນກີຣິອາດອາກບາ ແລະ
ຫມູ່ບ້ານທັງຫລາຍຂອງເມືອງນັ້ນ, ແລະ ໃນດີໂບນ ແລະ ໃນຫມູ່ບ້ານທັງຫລາຍຂອງເມືອງນັ້ນ, ແລະ ໃນເຢກັບເຊເອນ
ແລະຫມູ່ບ້ານທັງຫລາຍຂອງເມືອງນັ້ນ,[26]ແລະ ໃນເຢຊູອາ, ໃນໂມລາດາ, ໃນເບັດເປເລັດ,[27]ໃນຮາຊາຊູນອານ, ແລະ ໃນເບເອນເຊບາ ແລະ
ໃນຫມູ່ບ້ານທັງຫລາຍຂອງເມືອງນັ້ນ.
[28]ປະຊາຊົນບາງສ່ວນຂອງຢູດາອາໄສຢູ່ໃນຊິກລັກ, ໃນເມໂກນາ ແລະ ຫມູ່ບ້ານທັງຫລາຍຂອງເມືອງນັ້ນ,[29]ໃນເອນຣິມໂມນ, ໂຊຣາ, ຢາຣະມຸດ,
[30]ຊາໂນອາ, ອາດຸນລໍາ, ແລະ ໃນຫມູ່ບ້ານທັງຫລາຍຂອງເມືອງທັງຫລາຍ ແລະ ໃນລາກິດ ໄຮ່ນາທັງຫລາຍຂອງເມືອງ ແລະ
ອາເຊກາແລະຫມູ່ບ້ານທັງຫລາຍຂອງເມືອງນັ້ນ. ດັ່ງນັ້ນພວກເຂົາຈຶ່ງອາໄສຢູ່ຕັ້ງແຕ່ເບເອນເຊບາຈົນຮອດພູເຂົາຮິນໂນມ.
[31]ປະຊາຊົນຂອງພວກເບັນຢາມິນໄດ້ອາໄສຕໍ່ຈາກເກບາ, ທີ່ມິກມາດ ແລະ ອາອີ, ທີ່ເບັດເອນ ແລະໃນຫມູ່ບ້ານທັງຫລາຍຂອງເມືອງນັ້ນ,
[32]ທີ່ອານາທົດ, ໂນບ, ອານານີຢາ,[33]ຮາໂຊ, ຣາມາ, ກິດຕາອິມ,[34]ຮາດິດ, ເຊໂບີອິມ, ເນບັນລັດ,[35]ໂລດ, ແລະ ໂອໂນ,
ແລະໃນຮ່ອມພູຂອງພວກຊ່າງຝີມື.[36]ບາງສ່ວນຂອງພວກເລວີຜູ້ທີ່ອາໄສໃນຢູດາ ຖືກກໍານົດໃຫ້ຢູ່ກັບປະຊາຊົນຂອງພວກເບັນຢາມິນ.

 generated on Tue Jun 17 19:01:42 2025

12 [1]ຕໍ່ໄປນີ້ພວກປະໂຣຫິດ ແລະ ພວກເລວີທີ່ຂຶ້ນມາພ້ອມກັບເຊຣຸບບາເບນ ລູກຂອງເຊອານຕີເອນ ແລະ ກັບເຢຊູອາຄື: ເສຣາອີຢາ,
ເຢເຣມີຢາ, ເອຊະຣາ,[2]ອາມາຣີຢາ, ມັນລຸກ, ຮັດຕຸຊະ,[3]ເຊການີຢາ, ເຣຮູມ, ແລະ ເມເຣໂມດ.

[4]ຍັງມີອິດໂດ, ກິນເນໂທອີ, ອາບີຢາ,[5]ມີຢາມິນ, ມາອາດີຢາ, ບິນກາ,[6]ເຊມາອີຢາ, ແລະ ໂຢອີອາຣິບ, ເຢດາອີຢາ,[7]ສານລູ, ອາມົກ, ຮິນກີຢາ,
ແລະ ເຢດາອີຢາ. ຄົນເຫລົ່ານີ້ເປັນພວກຫົວໜ້າຂອງປະໂຣຫິດ ແລະພີ່ນ້ອງຂອງເຂົາໃນສະໄຫມຂອງເຢຊູອາ.
[8]ພວກເລວີ ຄື ເຢຊູອາ, ບິນນູອີ, ກາດມີເອນ, ເຊເຣບີຢາ, ຢູດາ, ແລະມັດຕານີຢາ, ຜູ້ທີ່ດູແລບົດເພງຂອບພຣະຄຸນ, ພ້ອມກັບຄະນະຂອງເຂົາ.
[9]ບັກບຸກີຢາ ແລະ ອັນໂນ, ຄະນະຂອງເຂົາ, ໄດ້ຢືນຢູ່ກົງກັນຂ້າມພວກເຂົາລະຫວ່າງການປະຕິບັດງານ.
[10]ເຢຊູອາເປັນພໍ່ຂອງໂຢອີອາກິມ, ໂຢອີອາກິມເປັນພໍ່ຂອງເອລີອາຊິບ, ເອລີອາຊິບ, ເອລີອາຊິບເປັນພໍ່ຂອງໂຢອີອາດາ,
[11]ໂຢອີອາດາເປັນພໍ່ຂອງໂຢນາທານ ໂຢນາທານເປັນພໍ່ຂອງຢັດດູອາ.
[12]ໃນສະໄຫມຂອງໂຢອີອາກິມ ພວກນີ້ເປັນປະໂຣຫິດ, ເປັນຜູ້ນຳຂອງຕະກຸນຕ່າງໆ ໄດ້ແກ່: ເມຣາອີຢາເປັນຜູ້ນຳຂອງຕະກຸນເສຣາອີຢາ,
ຮານານີຢາ ເປັນຜູ້ນຳຂອງຕະກຸນເຢເຣມີຢາ,[13]ເມຊຸນລຳເປັນຜູ້ນຳຂອງຕະກຸນເອຊະຣາ, ເຢໂຮຮານານເປັນຜູ້ນຳຂອງຕະກຸນອາມາຣີຢາ,
[14]ໂຢນາທານເປັນຜູ້ນຳຂອງຕະກຸນມັນລູກີ, ໂຢເຊັບເປັນຜູ້ນຳຂອງຕະກຸນເຊບານີຢາ.
[15]ອັດນາເປັນຜູ້ນຳຂອງຕະກຸນຮາຣິມ, ເຮນໄກເປັນຜູ້ນຳຂອງຕະກຸນເມຣາອີໂຢດ,[16]ເຊກາຣີຢາເປັນຜູ້ນຳຂອງຕະກຸນອິດໂດ,
ເມຊຸນລຳເປັນຜູ້ນຳຂອງຕະກຸນກິນເນໂທນ, ແລະ[17]ຊິກະຣີເປັນຜູ້ນຳຂອງຕະກຸນອາບີຢາ, ຂອງມີນີອາມິນ.
ປີນໄຕເປັນຜູ້ນຳຂອງຕະກຸນໂມອາດີຢາ.[18]ຊາມມູອາເປັນຜູ້ນຳຂອງຕະກຸນບິນກາ, ເຢໂຮນາທານເປັນຜູ້ນຳຂອງຕະກຸນເຊມາອີຢາ,
[19]ມັດເຕໄນເປັນຜູ້ນຳຂອງຕະກຸນໂຢອີອາຣິບ, ອຸດຊີເປັນຜູ້ນຳຂອງຕະກຸນເຢດາອີຢາ,[20]ກັນໄລເປັນຜູ້ນຳຂອງຕະກຸນສານໄລ,
ເອເບເປັນຜູ້ນຳຂອງຕະກຸນອາມົກ,[21]ຮາຊາບີຢາເປັນຜູ້ນຳຂອງຕະກຸນຮິນກີຢາ, ແລະ ເນທາເນນເປັນຜູ້ນຳຂອງຕະກຸນເຢດາອີຢາ.
[22]ໃນສະໄຫມຂອງເອລີອາຊິບ, ພວກເລວີຕະກຸນຕ່າງໆ ຄື ຕະກຸນເອລີອາຊິບ, ໂຢອີອາດາ, ໂຢນາທານ, ແລະ
ຢັດດູອາໄດ້ຮັບການບັນທຶກໄວ້ວ່າເປັນຫົວໜ້າຂອງຕະກຸນຕ່າງໆ
ແລະບັນດາປະໂຣຫິດມີການບັນທຶກໄວ້ລະຫວ່າງສະໄຫມຂອງກະສັດດາຣິອຸດຊາວເປີເຊຍ.[23]ເຫລົ່າເຊື້ອຊາດຂອງເລວີ,
ຜູ້ນຳຂອງຕະກຸນຂອງພວກເຂົາໄດ້ຮັບການບັນທຶກໄວ້ໃນບັນດາຫນັງສືປະຈຳປີ ຈົນຮອດສະໄຫມຂອງໂຢນາທານລູກຂອງເອລີອາຊິບ.
[24]ຜູ້ນຳຂອງພວກເລວີຄື ຮາຊາບີຢາ, ເຊເຣບີຢາ, ແລະ ເຢຊູອາລູກຊາຍກາດມີເອນ, ແລະ ຄະນະຂອງພວກເຂົາ,
ທີ່ຢືນຢູ່ກົງກັນຂ້າມກັບພວກເຂົາທີ່ຖວາຍຄຳສັນລະເສີນ ແລະ ຄຳຂອບພຣະຄຸນ, ການຕອບສະໜອງລະຫວ່າງກັນຕອນຕໍ່ຕອນ
ເພື່ອປະຕິບັດຕາມຄຳສັ່ງຂອງດາວິດ, ຄົນຂອງພຣະເຈົ້າ.[25]ມັດຕານີຢາ, ບັກບຸກີຢາ, ໂອບາດີຢາ, ເມຊຸນລຳ, ຕານໂມນ, ແລະ ອັກກຸບ
ເປັນຄົນເຝົ້າປະຕູ.[26]ຄົນເຫລົ່ານີ້ໄດ້ຮັບໃຊ້ຢູ່ໃນສະໄຫມຂອງໂຢອີອາກິມລູກຂອງເຢຊູອາ ຜູ້ເປັນລູກໂຢຊາດັກ, ແລະ
ໃນສະໄຫມຂອງເນຫາມີຢາ ກັບສະໄຫມຂອງເອຊະຣາຜູ້ທີ່ເປັນປະໂຣຫິດ ແລະ ທັງເປັນຜູ້ທີ່ຊ່ຽວຊານພຣະບັນຍັດຂອງຢິວ.
[27]ໃນການເຮັດພິທີມອບຖວາຍກຳແພງເຢຣູຊາເລັມ, ພວກປະຊາຊົນໄດ້ຊອກຫາບັນດາຄົນເຜົ່າເລວີ, ຕາມທີ່ພວກເຂົາໃຊ້ຊີວິດຢູ່,
ເພື່ອຈະນຳພວກເຂົາກັບມານະຄອນເຢຣູຊາເລັມ ເພື່ອສະຫລອງການມອບຖວາຍດ້ວຍຄວາມຍິນດີ, ດ້ວຍການຂອບພຣະຄຸນ ແລະ
ດ້ວຍການຮ້ອງເພງ, ພ້ອມດ້ວຍສຽງແສ່ງ, ແລະສຽງພິນ.[28]ພວກຄະນະນັກຮ້ອງລວມມາຈາກບໍລິເວນຮອບນະຄອນເຢຣູຊາເລັມ
ແລະມາຈາກຫມູ່ບ້ານຕ່າງໆ ຂອງຊາວເນໂຕຟາ.
[29]ພວກເຂົາມາຈາກເມືອງເບັດກິນການແລະ ຈາກເຂດເກບາ ແລະ ຈາກອາຊະມາເວດ,
ເພາະວ່າພວກນັກຮ້ອງໄດ້ສ້າງຫມູ່ບ້ານສຳລັບພວກເຂົາເອງຮອບໆນະຄອນເຢຣູຊາເລັມ.[30]ພວກປະໂຣຫິດ ແລະ
ຊາວເລວີໄດ້ຊຳລະລ້າງຕົນເອງ, ປະຊາຊົນ, ປະຕູເມືອງ, ແລະກຳແພງໃຫ້ບໍຣິສຸດ.
[31]ແລ້ວຂ້ານ້ອຍໄດ້ໃຫ້ຜູ້ນຳຂອງຢູດາຂຶ້ນເທິງກຳແພງ, ແລະຂ້ານ້ອຍໄດ້ແຕ່ງຕັ້ງຄະນະນັກຮ້ອງສອງຄະນະໃຫຍ່ເປັນຜູ້ກ່າວຂອບພຣະຄຸນ,
ຄະນະຫນຶ່ງໄດ້ຍ່າງໄປທາງຂົວເທິງກຳແພງໄປຫາປະຕູກອງຂີ້ເຫຍື້ອ.
[32]ໂຮຊາອີຢາ ແລະ ເຄິ່ງຫນຶ່ງຂອງຜູ້ນຳຢູດາຍ່າງນຳພວກເຂົາ,[33]ແລະ ຫລັງຈາກນີ້ຄົນຍ່າງນຳພວກເຂົາໄປ ຄື ອາຊາຣີຢາ, ເອຊະຣາ, ເມຊຸນລຳ,
[34]ຢູດາ, ເບັນຢາມິນ, ເຊມາອີຢາ, ແລະ ເຢເຣມີຢາ.[35]ແລະ ບາງຄົນທີ່ເປັນລູກຂອງພວກປະໂລຫິດພ້ອມດ້ວຍ ເຊກາຣີຢາ, ລູກຂອງໂຢນາທານ
ຜູ້ເປັນລູກຂອງ ເຊມາອີຢາ ລູກຂອງມັດຕານີຢາ ຜູ້ເປັນລູກຂອງ ມີກາອີຢາ ຜູ້ເປັນລູກຂອງຊັກກູເຣ ຜູ້ເປັນລູກຂອງອາສັບ.
[36]ຍັງມີບັນດາຍາດພີ່ນ້ອງຂອງເຊກາຣີຢາຕິດຕາມມາຄື ເຊມາອີຢາ, ອາຊາເຣນ, ມີລາໄລ, ກີລາໄລ, ມາໄອ, ເນທາເນນ, ຢູດາ, ແລະ ຮານານີ,
ພ້ອມດ້ວຍເຄື່ອງດົນຕຣີຕ່າງໆ ຂອງດາວິດຄົນຂອງພຣະເຈົ້າ. ເອຊະຣາໄດ້ຢູ່ທາງຫນ້າພວກເຂົາ.[37]ຂ້າງປະຕູນ້ຳພຸ
ພວກເຂົາໄດ້ຍ່າງຊື່ໄປຂຶ້ນຄັນໄດຂອງເມືອງແຫ່ງດາວິດ, ໂດຍທາງຄັນໄດໄປຫາກຳແພງເຫນືອພະຣາຊວັງຂອງດາວິດ,
ໄປປະຕູນ້ຳທາງທິດຕາເວັນອອກ.
[38]ຄະນະນັກຮ້ອງອີກຄະນະຫນຶ່ງທີ່ເປັນຜູ້ກ່າວຄຳຂອບພຣະຄຸນໄດ້ຍ່າງໄປອີກທາງຫນຶ່ງ.
ຂ້າພະເຈົ້ານຳພວກເຂົາໄປເທິງກຳແພງພ້ອມກັບປະຊາຊົນ, ເຄິ່ງຫນຶ່ງເຫນືອຫໍຄອຍເຕົາໄຟ, ໄປຮອດກຳແພງກວ້າງ,[39]ແລະ
ຈາກທີ່ນັ້ນໄປປະຕູແຫ່ງເອຟຣາອິມ, ແລະ ທາງປະຕູເກົ່າ, ແລະທາງປະຕູປາ, ແລະ ຫໍຄອຍຮານາເນນ, ແລະຫໍຄອຍຂອງຄົນຫນຶ່ງຮ້ອຍ,
ໄປຮອດປະຕູແກະ, ແລະ ພວກເຂົາຢຸດຢູ່ບ່ອນປະຕູແຫ່ງຍາມ.
[40]ຄະນະນັກຮ້ອງທັງສອງຄະນະທີ່ກ່າວຄຳຂອບພຣະຄຸນໄດ້ເຂົ້າປະຈຳທີ່ໃນພຣະວິຫານຂອງພຣະເຈົ້າ, ແລະ
ຂ້ານ້ອຍກໍໄດ້ເຂົ້າປະຈຳທີ່ຄືກັນພ້ອມດ້ວຍເຄິ່ງຫນຶ່ງຂອງພວກເຈົ້າຫນ້າທີ່ຢູ່ກັບຂ້ານ້ອຍ.
[41]ແລ້ວພວກປະໂຣຫິດກໍໄດ້ເຂົ້າປະຈຳທີ່ພ້ອມດ້ວຍແກໄດ້ແກ່: ເອລີອາກິມ, ມາອາເສອີຢາ, ມີນີອາມິນ, ມີກາອີຢາ, ເອລີໂອນາຍ, ເຊກາຣີຢາ,
ແລະຮານານີຢາ,[42]ແລະພ້ອມດ້ວຍມາອາເສອີຢາ, ເຊມາອີຢາ, ເອເລອາຊາ, ອຸດຊີ, ເຢໂຮຮານານ, ມັນກີຢາ, ເອລາມ, ແລະເອເຊ, ແລະ
ຄະນະນັກຮ້ອງໄດ້ຮ້ອງເພງ ແລະ ເຢຊະຣາຮີຢາເປັນຜູ້ນຳຂອງພວກເຂົາ.
[43]ເຂົາທັງຫລາຍໄດ້ຖວາຍສັດບູຊາທີ່ຍິ່ງໃຫຍ່ໃນວັນນັ້ນ ແລະຊົມຊື່ນຍິນດີ, ເພາະພຣະເຈົ້າຊົງເຮັດໃຫ້ພວກເຂົາຊົມຊື່ນຍິນດີ.
ດ້ວຍຄວາມເບີກບານໃຈ ພວກຜູ້ຍິງແລະເດັກນ້ອຍ. ກໍຍິນດີນຳ ແລະຄວາມສຸກຂອງເຢຣູຊາເລັມກໍໄດ້ຍິນໄປໄກ.

[44]ໃນມື້ນັ້ນ ເຂົາແຕ່ງຕັ້ງພວກຜູ້ຊາຍໃຫ້ເບິ່ງແຍງຫ້ອງເກັບເຄື່ອງສຳລັບຂອງຖວາຍຕ່າງໆ, ຜົນທຳອິດຕ່າງໆ,
ແລະລວບລວມໃຫ້ເປັນໄປຕາມສັດສ່ວນກຳນົດໄວ້ໃນບັນຍັດສຳລັບພວກປະໂຣຫິດພວກເລວີ
ແຕ່ລະຄົນໄດ້ຖືກກຳນົດໃຫ້ໄປເຮັດວຽກຢູ່ທົ່ງນາໃກ້ເມືອງຕ່າງໆ. ສ່ວນຢູດາຊື່ນຊົມຍິນດີຕໍ່ພວກປະໂຣຫິດ ແລະ
ພວກເລວີຜູ້ທີ່ຢືນຕໍ່ຫນ້າພວກເຂົາທັງຫລາຍ.
[45]ພວກເຂົາໄດ້ຮັບໃຊ້ພຣະເຈົ້າຂອງພວກເຂົາ, ແລະ ໃນການຮັບໃຊ້ເພື່ອການຊໍາລະໃຫ້ບໍຣິສຸດ,
ແລະ ພວກນັກຮ້ອງແລະຄົນເຝົ້າປະຕູກໍເຮັດເຊັ່ນດຽວກັນໃນການຮັບໃຊ້ຕາມຄຳສັ່ງ, ຂອງດາວິດ ແລະຂອງໂຊໂລໂມນລູກຂອງທ່ານ.
[46]ເປັນເວລາດົນມາແລ້ວ, ໃນສະໄຫມຂອງດາວິດ ແລະອາສັບ, ມີຜູ້ຄວບຄຸມເບິ່ງແຍງຄະນະນັກຮ້ອງ, ແລະ ມີເພງສັນລະເສີນ ແລະ ຂອບພ
ຣະຄຸນພຣະເຈົ້າ.
[47]ໃນສະໄຫມຂອງເຊຣຸບບາເບນ ແລະ ໃນສະໄຫມຂອງເນເຫມີຢາ,
ອິດສະຣາເອນທັງປວງໄດແບ່ງປັນປະຈຳແກ່ພວກນັກຮ້ອງ, ແລະພວກຄົນເຝົ້າປະຕູ ແລະ ເຂົາໄດ້ປັນສ່ວນຂອງພວກເລວີ, ໄວ້ຕ່າງຫາກ ແລະ
ພວກເລວີໄດ້ປັນສ່ວນສຳລັບເຊື້ອຊາດຂອງອາໂຣນໄວ້ຕ່າງຫາກ.

 generated on Tue Jun 17 19:01:42 2025

# 13

[1]ໃນວັນນັ້ນທີ່ພວກເຂົາໄດ້ອ່ານຫນັງສືຂອງໂມເຊໃຫ້ພວກອິດສະຣາເອນໄດ້ຍິນ. ມີການພົບວ່າໃນຫນັງສືນັ້ນໄດ້ຂຽນໄວ້ວ່າບໍ່ຄວນໃຫ້ຄົນອຳໂມນ
ຫລື ຄົນໂມອາບເຂົ້າມາໃນຊຸມຊົນຂອງພຣະເຈົ້າຕະຫລອດໄປ.[2]ນີ້ເປັນເພາະວ່າພວກເຂົາບໍ່ໄດ້ມາຫາພວກອິດສະຣາເອນພ້ອມດ້ວຍອາຫານ
ແລະ ດ້ວຍນ້ຳ, ແຕ່ພວກເຂົາໄດ້ຈ້າງບາລາອາມໃຫ້ມາສາບແຊ່ງພວກອິດສະຣາເອນ.
ຢ່າງໃດກໍຕາມພຣະເຈົ້າຂອງເຮົາໄດ້ປ່ຽນຄຳສາບແຊ່ງໃຫ້ເປັນຄຳອວຍພອນ.[3]ເມື່ອທີ່ພວກເຂົາໄດ້ຍິນກົດຫມາຍ,
ພວກເຂົາໄດ້ແຍກພວກອິດສະຣາເອນອອກຈາກຄົນຕ່າງຊາດທຸກຄົນ.

[4]ສ່ວນກ່ອນຫນ້ານີ້ ເອລີຢາຊິບປະໂຣຫິດໄດ້ຮັບແຕ່ງຕັ້ງໃຫ້ເບິ່ງຫ້ອງເກັບເຄື່ອງທັງຫລາຍໃນພຣະວິຫານຂອງພຣະເຈົ້າຂອງເຮົາ.
ເຂົາກ່ຽວຂ້ອງກັບໂທບີຢາ.[5]ເອລີຢາຊິບໄດ້ຈັດຫ້ອງຂະຫນາດໃຫຍ່ໃຫ້ກັບໂທບີຢາ,
ຊຶ່ງກ່ອນຫນ້ານີ້ຫ້ອງດັ່ງກ່າວໄດ້ຖືກເປັນບ່ອນເກັບເຄື່ອງຖະຫວາຍບູຊາ, ກຳຍານເຄື່ອງຫອມ, ເຄື່ອງໃຊ້ຕ່າງໆ ແລະ
ຫນຶ່ງສ່ວນສິບຂອງພືດຜົນເປັນເມັດເຫລົ້າອະງຸ່ນໃຫມ່, ແລະ ນ້ຳມັນ, ຊຶ່ງຖືກຈັດໄວ້ໃຫ້ສຳລັບພວກເລວີ, ພວກນັກຮ້ອງ, ແລະ
ພວກເບິ່ງແຍງຮັກສາປະຕູ, ແລະ ຂອງຖວາຍສຳລັບພວກປະໂຣຫິດ.
[6]ແຕ່ທັງຫມົດນີ້ເກີດຂຶ້ນໃນຂະນະທີ່ຂ້ານ້ອຍໄດ້ຢູ່ໃນເມືອງເຢຣູຊາເລັມ. ເພາະໃນປີທີສາມສິບສອງແຫ່ງອາກທາເຊັດ
ທີ່ໄດ້ເປັນກະສັດຂອງນະຄອນບາບີໂລນນັ້ນ. ພາຍຫລັງມາຂ້ານ້ອຍໄດ້ກັບໄປລາຍງານຕໍ່ກະສັດ,[7]ແລະ
ຫລັງຈາກນັ້ນຂ້ານ້ອຍໄດ້ກັບໄປເຢຣູຊາເລັມ.
ຂ້ານ້ອຍໄດ້ເຂົ້າໃຈເຖິງຄວາມຊົ່ວຮ້າຍຊຶ່ງເອລີຢາຊິບໄດ້ກະທຳໂດຍການໃຫ້ທີ່ບໍລິເວນຂອງພຣະວິຫານຂອງພຣະເຈົ້າແກ່ໂທບີອາ.
[8]ຂ້ານ້ອຍຢາກຮ້າຍຫລາຍ ແລະ ຂ້ານ້ອຍໄດ້ໂຍນເຄື່ອງເຮືອນທັງສິ່ງຂອງໂທບີຢາອອກຈາກຫ້ອງເກັບເຄື່ອງນັ້ນ.
[9]ຂ້ານ້ອຍໄດ້ສັ່ງເຂົາຊຳລະຫ້ອງເກັບຂອງທັງຫລາຍ, ແລະ ຂ້ານ້ອຍໄດ້ນຳເຄື່ອງໃຊ້ຕ່າງໆ ຂອງພຣະວິຫານຂອງພຣະເຈົ້າ
ຄືການຖວາຍທັນຍະບູຊາທັງຫລາຍ, ແລະ ກຳຍານກັບເຂົ້າໄປໄວ້ໃນຫ້ອງເກັບເຄື່ອງຂອງເຫລົ່ານັ້ນ.
[10]ຂ້ານ້ອຍໄດ້ຮຽນຮູ້ວ່າສ່ວນຂອງພວກເລວີບໍ່ໄດ້ຖືກມອບໃຫ້ພວກເຂົາ, ແລະ ພວກນັກຮ້ອງຜູ້ໄດ້ເຮັດວຽກໄດ້ຫນີກັບ,
ໄປຍັງທົ່ງນາຂອງພວກເຂົາ,[11]ດັ່ງນັ້ນຂ້ານ້ອຍຈຶ່ງໄດ້ຕໍ່ວ່າພວກຂ້າຣາຊການ ແລະ ເວົ້າວ່າ, "ເປັນຫຍັງພຣະວິຫານຂອງພຣະເຈົ້າຖືກລະເລີຍ?
ຂ້ານ້ອຍໄດ້ລວບລວມພວກເຂົາ ແລະ ຕັ້ງພວກເຂົາຕາມຕຳແຫນ່ງຂອງພວກເຂົາ.
[12]ຈາກນັ້ນພວກ ຢູດາທັງຫມົດໄດ້ນຳຄັງຂອງພືດ, ຜົນເຫລົ້າອະງຸ່ນ, ແລະ ນ້ຳມັນມາໄວ້ໃນຫ້ອງເກັບເຄື່ອງ.
[13]ຂ້ານ້ອຍໄດ້ແຕ່ງຕັ້ງຜູ້ດູແລຫ້ອງເກັບເຄື່ອງຄື ເຊເລມີຢາປະໂຣຫິດ ແລະ ຊາດົກ ຜູ້ເປັນທຳມະຈານ, ແລະ ຈາກພວກເລວີ, ຄືເປດາອີຢາ.
ຖັດມາຈາກພວກເຂົາຄືຮານານລູກຊາຍຂອງສັກກູເຣຜູ້ເປັນລູກຂອງມັດຕານີຢາ, ເພາະວ່າພວກເຂົາຖືກນັບໄດ້ວ່າໄວ້ໃຈໄດ້.
ຫນ້າທີ່ຂອງພວກເຂົາຄືການແຈກຢາຍສິ່ງຂອງຕ່າງໆ ໃຫ້ແກ່ພວກພີ່ນ້ອງຂອງພວກເຂົາ.[14]ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ,
ຂໍຊົງລະນຶກຄິດເຖິງຂ້ານ້ອຍກ່ຽວກັບເລື່ອງນີ້, ແລະ
ຂໍຢ່າຊົງລົບລ້າງການກະທຳດີທັງຫລາຍທີ່ຂ້ານ້ອຍໄດ້ເຮັດເພື່ອພຣະວິຫານຂອງພຣະເຈົ້າຂອງຂ້ານ້ອຍ ແລະ ການປະຕິບັດຮັບໃຊ້ນັ້ນ.
[15]ໃນເວລານັ້ນ ໃນຢູດາຂ້ານ້ອຍໄດ້ເຫັນປະຊາຊົນບີບນ້ຳອະງຸ່ນໃນວັນສະບາໂຕ ແລະ ນຳກອງເຂົ້າບັນທຸກໃສ່ຫລັງລາທັງຫລາຍ,
ແລະເຫລົ້າອະງຸ່ນ, ຜົນອະງຸ່ນ, ຜົນຫມາກເດື່ອ, ແລະເຄື່ອງເປັນເມັດທຸກປະເພດ,
ຊຶ່ງພວກເຂົາໄດ້ນຳເຂົ້າມາໃນກຸງເຢຣູຊາເລັມໃນວັນສະບາໂຕ. ຂ້ານ້ອຍໄດ້ທັກທ້ວງພວກເຂົາທີ່ກຳລັງຊື້ຂາຍອາຫານໃນວັນນັ້ນ.
[16]ຜູ້ຊາຍຈາກໄທຣະ ທີ່ຢູ່ອາໄສໃນກຸງເຢຣູຊາເລັມໄດ້ນຳປາ ແລະ ສິນຄ້າທຸກປະເພດເຂົ້າມາ, ແລະ
ພວກເຂົາໄດ້ຂາຍສິນຄ້າເຫລົ່ານີ້ໃຫ້ປະຊາຊົນຢູດາ ແລະ ກັບປະຊາຊົນໃນເມືອງນັ້ນໃນວັນສະບາໂຕ!
[17]ຈາກນັ້ນຂ້ານ້ອຍໄດ້ເວົ້າວ່າຜູ້ນຳຂອງພວກຢູດາ, "ພວກເຈົ້າກຳລັງເຮັດສິ່ງຊົ່ວຮ້າຍຫຍັງກັນ, ເປັນການລົບລູ່ວັນສະບາໂຕບໍ?
[18]ບັນພະບູລຸດຂອງເຈົ້າທັງຫລາຍເຮັດແນວນີ້ບໍ? ພຣະເຈົ້າຂອງເຮົາໄດ້ນຳສິ່ງທີ່ຊົ່ວຮ້າຍທັງຫມົດນີ້ມາໃຫ້ເຮົາ ແລະເມືອງນີ້ບໍ?
ບັດນີ້ພວກເຈົ້າກຳລັງນຳພຣະພິໂລດທີ່ເພີ່ມຫລາຍຂຶ້ນມາໃຫ້ພວກອິດສະຣາເອນໂດຍການຫມິ່ນປະຫມາດວັນສະບາໂຕ."
[19]ທັນທີທີ່ມືດລົງ ທີ່ປະຕູເມືອງທັງຫລາຍກ່ອນວັນສະບາໂຕ, ຂ້ານ້ອຍໄດ້ສັ່ງໃຫ້ປິດປະຕູທັງຫລາຍ ແລະ
ບໍ່ໃຫ້ເປີດອີກຈົນກວ່າຈະພົ້ນວັນສະບາໂຕ ຂ້ານ້ອຍໄດ້ຕັ້ງຄົນໃຊ້ບາງຄົນຂອງຂ້ານ້ອຍທີ່ປະຕູເມືອງທັງຫລາຍ
ດັ່ງນັ້ນຈຶ່ງບໍ່ໃຫ້ສຳພາລະສິ່ງຂອງໃດໆ ສາມາດນຳເຂົ້າມາໃນວັນສະບາໂຕ.[20]ພໍ່ຄ້າທັງຫລາຍ ແລະ
ພວກຂາຍສິນຄ້າທຸກຊະນິດຕ້ອງພັກນອນນອກກຸງເຢຣູຊາເລັມຄືນຫນຶ່ງຫລືສອງຄືນ.
[21]ແຕ່ຂ້ານ້ອຍໄດ້ເຕືອນພວກເຂົາ, "ເປັນຫຍັງພວກເຈົ້າພັກນອນນອກກຳແພງເມືອງ? ຖ້າພວກເຈົ້າເຮັດອີກ, ເຮົາຈະຈັບພວກເຈົ້າ!
"ຕັ້ງແຕ່ນັ້ນເປັນຕົ້ນມາພວກເຂົາບໍ່ໄດ້ມາໃນວັນສະບາໂຕອີກ.[22]ຈາກນັ້ນຂ້ານ້ອຍໄດ້ສັ່ງພວກເລວີໃຫ້ຊຳລະຕົວພວກເຂົາເອງ, ແລະ ມາ ແລະ
ຮັກສາປະຕູທັງຫລາຍເພື່ອຮັກສາວັນສະບາໂຕໃຫ້ບໍຣິສຸດ. ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ, ຂໍຊົງລະນຶກເຖິງຂ້ານ້ອຍສຳລັບເລື່ອງນີ້ດ້ວຍ ແລະ
ຂໍຊົງເມດຕາຂ້ານ້ອຍ ເພາະພັນທະສັນຍາທີ່ຫມັ້ນຄົງພຣະອົງທີ່ມີຕໍ່ຂ້ານ້ອຍ.
[23]ເວລານັ້ນຂ້ານ້ອຍໄດ້ເຫັນພວກຢິວແຕ່ງງານກັບຍິງຄົນອາຊະໂດດ, ຄົນອຳໂມນ, ແລະຄົນໂມອາບ.
[24]ເຄິ່ງຫນຶ່ງຂອງພີ່ນ້ອງທັງຫລາຍຂອງພວກເຂົາ ເວົ້າພາສາອາຊະໂດດ. ບໍ່ມີໃຜເວົ້າພາສາຢູດາໄດ້,
ແຕ່ເວົ້າໄດ້ແຕ່ພາສາຂອງພວກເຂົາແຕ່ລະພວກເທົ່ານັ້ນ.
[25]ຂ້ານ້ອຍໄດ້ຂັດແຍ່ງນຳພວກເຂົາ, ແລະ ຂ້ານ້ອຍໄດ້ແຊ່ງດ່າພວກເຂົາ, ແລະ ຂ້ານ້ອຍໄດ້ຕີພວກເຂົາບາງຄົນ ແລະ ໄດ້ດຶງຜົມຂອງພວກເຂົາ.
ຂ້ານ້ອຍບັງຄັບໃຫ້ພວກເຂົາສາບານໃນພຣະນາມຂອງພຣະເຈົ້າ, ດ້ວຍການເວົ້າວ່າ, "ເຈົ້າທັງຫລາຍ ຈະບໍ່ຍົກລູກສາວທັງຫລາຍຂອງພວກເຈົ້າ
ໃຫ້ລູກຊາຍທັງຫລາຍຂອງພວກເຂົາ ຫລື ເອົາລູກສາວທັງຫລາຍຂອງພວກເຂົາມາໃຫ້ລູກຊາຍຂອງພວກເຈົ້າ, ຫລື ເພື່ອຕົວພວກເຈົ້າເອງ.
[26]ຊາໂລໂມນກະສັດຂອງອິດສະຣາເອນບໍ່ໄດ້ເຮັດບາບດ້ວຍເລື່ອງຜູ້ຍິງເຫລົ່ານີ້ບໍ?
ທ່າມກາງບັນດາປະຊາຊົນທີ່ມີກະສັດມີກະສັດອົງໃດເຫມືອນພະອົງ ແລະ ພຣະເຈົ້າຂອງພະອົງ ແລະພຣະເຈົ້າອົງທ່ຽງແທ້

 generated on Tue Jun 17 19:01:42 2025

ພຣະອົງເປັນກະສັດຄອບຄອງເຫນືອອິດສະຣາເອນທັງຫມົດ ແມ່ນວ່າຈະເປັນເຊັ່ນນັ້ນກໍຕາມ
ບັນດາສະຫມົມຕ່າງຊາດທັງຫລາຍຂອງພະອົງເປັນເຫດໃຫ້ພະອົງເຮັດບາບ.[27]ພວກເຮົາຄວນບໍ່ທີ່ຈະຟັງຄຳພວກເຈົ້າ ແລະ
ເຮັດສິ່ງຊົ່ວຮ້າຍອັນຍິ່ງໃຫຍ່, ແລະ ເຮັດການທໍລະຍົດຕໍ່ຕ້ານພຣະເຈົ້າຂອງເຮົາໂດຍການຮ່ວມມືກັບຍິງຕ່າງຊາດທັງຫລາຍ?"
[28]ລູກຊາຍຄົນຫນຶ່ງຂອງໂຢນາດາ ຜູ້ເປັນລູກຂອງເອລີຢາຊິບປະໂຣຫິດໃຫຍ່ ເປັນລູກຊາຍຂອງສັນບາລັນ ຄົນໂຮໂຮນາອີມ.
ດັ່ງນັ້ນຂ້ານ້ອຍຈຶ່ງໄດ້ດ່າສາບແຊ່ງເຂົາ ໄລ່ໃຫ້ເຂົາໄປຈາກຂ້ານ້ອຍ.[29]ຂ້າແດ່ ພຣະເຈົ້າຂອງຂ້ານ້ອຍ, ຂໍຊົງລະນຶກເຖິງຂ້ານ້ອຍ,
ເພາະວ່າພວກເຂົາໄດ້ເຮັດໃຫ້ຄວາມເປັນປະໂຣຫິດ, ແລະ ຂອງພວກເລວີເປັນມົນທິນ.
[30]ດັ່ງນັ້ນຂ້ານ້ອຍໄດ້ຊໍາລະພວກເຂົາຈາກຕ່າງດ້າວທຸກສິ່ງ, ແລະ ໄດ້ຕັ້ງຫນ້າທີ່ຂອງພວກປະໂຣຫິດ ແລະ ພວກເລວີ,
ແຕ່ລະພວກໃນງານຂອງພວກເຂົາ.[31]ຂ້ານ້ອຍໄດ້ຈັດຫາຟືນຖວາຍຕາມເວລາທີ່ກໍານົດ ແລະ ສໍາລັບຜົນທໍາອິດ. ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ,
ຂໍຊົງລະລຶກເຖິງຂ້ານ້ອຍຕະຫລອດໄປ.

# ເອສະເທີ

1 [1]ໃນຊ່ວງຣາຊະການຂອງກະສັດອາຫາສຸເອຣັດ (ນີ້ຄືກະສັດອາຫາສຸເອຣັດ ຜູ້ປົກຄອງຫລາຍກວ່າ 127 ແຂວງ,
ຈາກແຂວງອິນເດັຽໄປໄກຈົນເຖິງເອທີໂອເປັຽ),[2]ໃນເວລານັ້ນກະສັດອາຫາສຸເອຣັດ ຜູ້ປົກຄອງໄດ້ນັ່ງເທິງບັນລັງ ທີ່ປ້ອມປາການໃນເມືອງຊູຊາ.

[3]ໃນປີທີສາມແຫ່ງການຄອງຣາດຂອງພຣະອົງ, ພຣະອົງຊົງປຣະທານງານລ້ຽງສະຫລອງແກ່ເຈົ້ານາຍທັງຫລາຍ ແລະ
ຜູ້ວ່າການທັງສິ້ນຂອງພຣະອົງ. ກອງທັບຂອງເປີເຊັຽ ແລະ ເມເດັຽ, ບັນດາຂຸນນາງ ແລະ ຜູ້ປົກຄອງຂອງແຂວງຕ່າງໆ ໄດ້ເຝົ້າຢູ່ຕໍ່ຫນ້າພຣະອົງ.
[4]ພຣະອົງໄດ້ຊົງສຳແດງຄວາມຈະເຣີນຮຸ່ງເຮືອງແຫ່ງຣາຊະອານາຈັກຂອງພຣະອົງແລະ ກຽດຕິຍົດສະງ່າຣາສີແຫ່ງຄວາມຍິ່ງໃຫຍ່ຂອງພຣະອົງ
ເປັນເວລາຫລາຍວັນ, ຄື180ວັນ.
[5]ຈົນເຖິງວັນເຫລົ່ານັ້ນສິ້ນສຸດລົງ, ກະສັດໄດ້ຊົງປຣະທານງານລ້ຽງສະຫລອງຕໍ່ໄປອີກເຈັດວັນ.
ແກ່ປະຊາຊົນທຸກຄົນໃນປ້ອມປາການຂອງເມືອງຊູຊາ, ຕັ້ງແຕ່ຜູ້ນ້ອຍທີ່ສຸດຈົນເຖິງຜູ້ທີ່ສຳຄັນທີ່ສຸດ.
ງານລ້ຽງຈັດຂຶ້ນທີ່ລານໃນສວນທີ່ຣາຊະວັງຂອງກະສັດ.[6]ທີ່ລານໃນສວນນັ້ນໄດ້ຖືກຕົບແຕ່ງດ້ວຍມ່ານຜ້າຝ້າຍສີຂາວ ແລະສີມ່ວງ,
ໂຍງດ້ວຍຜ້າລີນິນຢ່າງດີ ແລະ ຜ້າລີນິນສີມ່ວງ, ແຂວນເທິງຮ່ວງເງິນຈາກເສົາຫີນອ່ອນ. ອີກທັງມ້ານັ່ງຍາວທີ່ເຮັດຈາກເງິນ ແລະ
ທອງເທິງພື້ນລາດປູນຝັງຫີນແດງ, ຫີນອ່ອນ, ໄຂ່ມຸກ ແລະປູດ້ວຍຫີນສີຕ່າງໆ.
[7]ເຄື່ອງດື່ມກໍໃສ່ໃນຈອກທອງຄໍາ. ແຕ່ລະຈອກມີເອກະລັກຄວາມຫລາກຫລາຍ ແລະ ລິນດ້ວຍເຫລົ້າອາງຸ່ນຂອງຣາດຊະວົງ
ຢ່າງອີ່ມຫນໍາສໍາລານດ້ວຍໃຈອັນກວ້າງຂວາງຂອງກະສັດ.[8]ການດື່ມກໍເປັນໄປຕາມການບັນຊາດໍາຣັດຂອງກະສັດ, "ຢ່າໃຫ້ມີການບັງຄັບໃດໆ."
ກະສັດໄດ້ຊົງມີຄໍາສັ່ງ ແກ່ຜູ້ວ່າການທຸກຄົນໃຫ້ຈັດຫາສິ່ງໃດກໍຕາມທີ່ແຂກປາຖນາ.
[9]ສ່ວນວ່າຣາຊິນີວາຊະຕີເອງກໍໄດ້ຊົງຈັດງານລ້ຽງແກ່ເຫລົ່າສະຕຣີ ຊຶ່ງຢູ່ໃນຣາຊະວັງຂອງກະສັດອາຫາສຸເອຣັດດ້ວຍເຊັ່ນກັນ.[10]ໃນວັນທີເຈັດ,
ເມື່ອຈິດໃຈຂອງກະສັດໄດ້ຊົງເບີກບານດ້ວຍເຫລົ້າອາງຸ່ນແລ້ວ, ພຣະອົງໄດ້ຊົງບັນຊາໃຫ້ ເມຮູມານ, ບິຊະທາ, ຮັກໂບນາ, ບິກທາ, ອາບາທາ,
ເຊທາເຣ ແລະ ກາກກັດ (ຊາຍຕອນທັງເຈັດຜູ້ທີ່ໄດ້ຮັບໃຊ້ພຣະອົງ),
[11]ໃຫ້ໄປທູນເຊີນພຣະຣາຊິນີວາຊະຕີມາພົບພຣະອົງພ້ອມດ້ວຍມຸງກຸດຂອງນາງ. ພຣະອົງໄດ້ຊົງປາຖນາໃຫ້ປະຊາຊົນ ແລະ
ບັນດາຂຸນນາງທັງຫລາຍໄດ້ຊື່ນຊົມໃນຄວາມງາມຂອງພຣະນາງ.
[12]ແຕ່ຣາຊິນີວາຊະຕີໄດ້ຊົງປະຕິເສດຄໍາເຊີນຂອງກະສັດ ຊຶ່ງໄດ້ຊົງຮັບສັ່ງໄປກັບຊາຍຕອນເຖິງພຣະນາງ. ແລ້ວກະສັດກໍໄດ້ຊົງພິໂຣດຫລາຍ;
ເຮັດໃຫ້ຄວາມຄຽດຮ້າຍເກີດຂຶ້ນພາຍໃນພຣະອົງ.
[13]ດັ່ງນັ້ນພະອົງຈຶ່ງໄດ້ຊົງໄປປຶກສາກັບຜູ້ຊໍານານໃນເລື່ອງຂອງກາລະເທສະ
(ເພາະເປັນທໍານຽມປະຕິບັດຂອງກະສັດທີ່ມີຕໍ່ບັນດາຜູ້ຊ່ຽວຊານດ້ານກົດຫມາຍ ແລະການພິພາກສາ).
[14]ໃນຂະນະນັ້ນເຫລົ່າທີ່ປຶກສາທີ່ຢູ່ໃກ້ກັບພຣະອົງຄືກາກເຊນາ, ເຊດຖາ, ອັດມາທາ, ຕາກຊິດ, ເມເຣັດ, ມາກເສນາ, ແລະ ເມມູການ,
ເຈົ້ານາຍທັງເຈັດແຫ່ງເປີເຊັຽ ແລະເມເດັຽ. ພວກເຂົາສາມາດເຂົ້າເຝົ້າກະສັດ,
ແລະພວກເຂົາມີຕໍາແຫນ່ງສູງສຸດໃນຣາຊະສໍານັກຂອງຣາຊະອານາຈັກ.
[15]"ຕາມກົດຫມາຍແລ້ວຕ້ອງເຮັດຢ່າງໃດຕໍ່ການກະທໍາຂອງພຣະຣາຊີນີວາຊະຕີ ເພາະນາງບໍ່ໄດ້ຊົງເຊື່ອຟັງຄໍາບັນຊາຂອງກະສັດອາຫາສຸເອຣັດ,
ຊຶ່ງໄດ້ຊົງຮັບສັ່ງຜ່ານເຫລົ່າຂ້າຣາຊະການເຖິງພຣະນາງ?"
[16]ເມມູການຈຶ່ງໄດ້ທູນຕໍ່ພຣະພັກກະສັດ ແລະເຫລົ່າຂ້າຣາຊະການທັງຫລາຍວ່າ, "ການກະທໍາຂອງພຣະຣາຊີນີວາຊະຕີ
ນັ້ນບໍ່ພຽງແຕ່ຜິດຕໍ່ກະສັດເທົ່ານັ້ນ, ແຕ່ຍັງຜິດຕໍ່ຂ້າຣາຊະການທັງຫລາຍ ແລະ ຄົນທັງປວງຜູ້ຊຶ່ງຢູ່ໃນບັນດາແຂວງທັງຫມົດຂອງກະສັດອາຫາສຸ
ເອຣັດດ້ວຍ.[17]ເພາະການກະທໍາຂອງພຣະຣາຊີນີຈະໄດ້ຍິນໄປເຖິງສະຕຣີທຸກຄົນ.
ນີ້ຈະເຮັດໃຫ້ພວກນາງປະຕິເສດຕໍ່ຜົວຂອງພວກນາງຢ່າງປະຫມາດ. ພວກເຂົາຈະກ່າວວ່າ, 'ກະສັດອາຫາສຸເອຣັດ
ໄດ້ສັ່ງໃຫ້ພຣະຣາຊີນີວາຊະຕີເຂົ້າເຝົ້າພຣະອົງ, ແຕ່ພຣະນາງຊົງປະຕິເສດ'[18]ກ່ອນວັນນີ້ຈະສິ້ນສຸດລົງແລະ
ກ່ອນທີ່ສະຕຣີຊັ້ນສູງໃນແຂວງຕ່າງໆ ແຫ່ງເປີເຊັຽ ແລະເມເດັຽ
ຈະໄດ້ຍິນເລື່ອງນີ້ເຫມືອນກັບພຣະຣາຊີນີຈະຊົງກ່າວຢ່າງດຽວກັນກັບບັນດາຂ້າຣາຊະການຂອງກະສັດ. ຈະເປັນການດູຫມິ່ນ ແລະ
ຄວາມຄຽດຢ່າງໃຫຍ່ຫລວງ.
[19]ຫາກເປັນທີ່ພໍພຣະທັຍກະສັດ, ໃຫ້ພຣະອົງໄດ້ຊົງສົ່ງສານອອກໄປ ແລະ ໃຫ້ຂຽນໃນກົດຫມາຍຂອງເປີເຊັຽ ແລະເມເດັຽ,
ຊຶ່ງບໍ່ສາມາດເພີກຖອນໄດ້ວ່າ, ນາງວາຊະຕີຈະຊົງບໍ່ໄດ້ເຂົ້າພົບພຣະອົງອີກ. ຂໍໃຫ້ກະສັດໄດ້ຊົງມອບຕໍາແຫນ່ງພຣະຣາຊີນີຂອງນາງ
ໃຫ້ແກ່ຜູ້ອື່ນທີ່ເຫມາະສົມກວ່ານາງ.[20]ເມື່ອກະສັດໄດ້ຊົງປະກາດສານອອກໄປທົ່ວຣາຊະອານາຈັກທີ່ກວ້າງໃຫຍ່ຂອງພຣະອົງ,
ເມຍທັງຫລາຍຈະຕ້ອງໃຫ້ກຽດແກ່ຜົວຂອງພວກນາງ, ບໍ່ເວັ້ນແມ່ນແຕ່ຜູ້ທີ່ເລັກນ້ອຍທີ່ສຸດເຖິງຜູ້ສໍາຄັນທີ່ສຸດ."

[21]ກະສັດໄດ້ຊົງເຫັນຊອບ ແລະ ເຈົ້ານາຍທັງຫລາຍຂອງພຣະອົງເຫັນຊອບກັບຄຳແນະນຳນີ້, ແລະ
ກະສັດໄດ້ຊົງເຮັດຕາມຄຳສະເຫນີຂອງເມມູການໄດ້ສະເຫນີ. [22]ພຣະອົງໄດ້ສົ່ງສານໄປຍັງແຂວງຕ່າງໆ, ແລະ
ໄດ້ຊົງຂຽນເຖິງແຕ່ລະແຂວງຕາມແຕ່ລະໃນພາສາຂອງທີ່ນັ້ນ. ພຣະອົງໄດ້ຊົງຂຽນເຖິງແຕ່ລະຄົນຕາມພາສາຂອງເຂົາ
ພຣະອົງໄດ້ຊົງມີບັນຊາວ່າໃຫ້ຊາຍທຸກຄົນເປັນນາຍໃນຄົວເຮືອນຂອງເຂົາ. ສານນີ້ໄດ້ຖືກສົ່ງໄປຕາມແຕ່ລະພາສາທົ່ວທັງຣາຊະອານາຈັກ.

 generated on Tue Jun 17 19:01:42 2025

2 [1]ພາຍຫລັງເຫດການເຫລົ່ານີ້, ເມື່ອຄວາມໃຈຮ້າຍຂອງກະສັດອາຫາສຸເອຣັດໄດ້ງຽບລົງ, ພຣະອົງໄດ້ຊົງລະນຶກເຖິງພຣະນາງວາຊະຕີ
ແລະສິ່ງທີ່ນາງໄດ້ກະທຳ. ພຣະອົງຍັງໄດ້ຊົງລະນຶກເຖິງ ສານທີ່ພຣະອົງປະກາດອອກໄປດ້ວຍເລື່ອງຂອງນາງ.
[2]ຂະນະນັ້ນພວກຊາຍຫນຸ່ມຂອງກະສັດທີ່ບົວລະບັດຮັບໃຊ້ພຣະອົງຢູ່ໄດ້ທູນວ່າ, "ຂໍຊົງຕັ້ງຜູ້ແທນພຣະອົງ
ເພື່ອຊອກຫາຍິງພົມມະຈາຣີທີ່ງົດງາມທັງຫລາຍເຂົ້າມາ.

[3]ຂໍໃຫ້ກະສັດໄດ້ຊົງແຕ່ງຕັ້ງເຈົ້າຫນ້າທີ່ໃນທົ່ວທຸກແຂວງຂອງອານາຈັກນີ້,
ເພື່ອລວບລວມຍິງສາວພົມມະຈັນທີ່ງົດງາມທັງຫມົດເຂົ້າມາໃນຮາເຣັມໃນປ້ອມປາການແຫ່ງເມືອງຊູຊາ. ໃຫ້ມາຢູ່ພາຍໃຕ້ການດູແລຂອງເຮໄກ,
ຊາຍຕອນຂອງກະສັດ, ຜູ້ມີຫນ້າທີ່ໃນການດູແລພວກຜູ້ຍິງ, ແລະໃຫ້ເຂົາຈັດຕຽມເຄື່ອງສຳອາງສຳລັບຍິງເຫລົ່ານັ້ນ.
[4]ໃຫ້ຍິງສາວທີ່ເປັນທີ່ພໍໃຈກະສັດໄດ້ຂຶ້ນເປັນພຣະຣາຊີນີແທນນາງວາຊະຕີ." ຄຳແນະນຳນີ້ເປັນທີ່ພໍພຣະທັຍກະສັດຫລາຍ, ແລະ
ພຣະອົງຊົງກະທຳເຊັ່ນນັ້ນ.
[5]ໃນເວລານັ້ນມີຊາຍຊາວຢິວຄົນຫນຶ່ງໃນປ້ອມປາການແຫ່ງເມືອງຊູຊາຊື່ມໍເດໄກ ຜູ້ເປັນລູກຊາຍຂອງຢາອີ ຜູ້ເປັນລູກຂອງຊີເມອີ ລູກຂອງກີເຊ,
ຄົນເບັນຢາມິນ.[6]ເຂົາໄດ້ຖືກຂັບໄລ່ໃຫ້ອອກຈາກກຸງເຢຣູຊາເລັມພ້ອມກັບພວກຊະເລີຍຊຶ່ງໄດ້ຂັບໄລ່ໄປພ້ອມກັບເຢໂຮຍອາກິນ,
ກະສັດແຫ່ງຢູດາຍ, ຜູ້ຊຶ່ງຖືກກະສັດເນບູກາດເນັດຊາ, ແຫ່ງບາບີໂລນໄດ້ຂັບໄລ່ໄປ.
[7]ເຂົາຫວ່ງໃຍຕໍ່ຮາດາສາ, ຄືເອສະເທີລູກສາວຂອງລຸງເຂົາ, ເພາະນາງບໍ່ມີທັງພໍ່ແລະແມ່. ຍິງສາວຄົນນີ້ມີຮູບຮ່າງ ງົດງາມ ແລະ ນ່າຮັກ.
ມໍເດໄກໄດ້ຮັບນາງເປັນເຫມືອນລູກສາວຂອງເຂົາເອງ.
[8]ເມື່ອຄຳສັ່ງສານຂອງກະສັດຖືກປະກາດອອກໄປ, ມີຍິງສາວຫລາຍຄົນຖືກນຳມາທີ່ປ້ອມປາການຂອງເມືອງຊູຊາ.
ພວກເຂົາໄດ້ໃຫ້ຢູ່ພາຍໃຕ້ການດູແລຂອງເຮໄກ. ເອສະເທີກໍໄດ້ຖືກພາເຂົ້າໄປຍັງຣາຊະວັງຂອງກະສັດເຊັ່ນກັນ ແລະ ຮັບການດູແລຈາກເຮໄກ,
ຜູ້ດູແລຜູ້ຍິງທັງຫມົດ.[9]ຍິງສາວນັ້ນເປັນທີ່ພໍໃຈເຂົາ, ແລະ ນາງໄດ້ຮັບຄວາມກາຣຸນາຈາກເຂົາ. ເຂົາໄດ້ຈັດຕຽມເຄື່ອງສຳອາງ ແລະ
ອາຫານໃຫ້ແກ່ນາງຢ່າງທັນທີ. ເຂົາຍັງໄດ້ຈັດຕັ້ງສາວໃຊ້ເຈັດຄົນໃຫ້ແກ່ນາງຈາກຣາຊະວັງຂອງກະສັດ, ແລະ
ເຂົາໄດ້ຍ້າຍນາງພ້ອມທັງສາວໃຊ້ໄປຍັງສະຖານທີ່ ທີ່ດີທີ່ສຸດໃນເຮືອນຂອງແມ່ຍິງ.
[10]ເອສະເທີບໍ່ໄດ້ບອກເລົ່າໃຫ້ໃຜຟັງທັງສິ້ນວ່ານາງເປັນຊົນຊາດໃດ ຫລືເປັນຍາດພີ່ນ້ອງໃຜ, ເພາະມໍເດໄກໄດ້ບອກນາງເອົາໄວ້ວ່າບໍ່ໃຫ້ບອກໃຜ.
[11]ທຸກໆວັນມໍເດໄກຈະຍ່າງໄປມາຢູ່ທາງຫນ້າປະຕູທີ່ລານຂ້າງນອກເຮືອນຂອງແມ່ຍິງ, ເພື່ອຮັບຟັງເຖິງຄວາມເປັນຢູ່ຂອງເອສະເທີ,
ແລະໃຫ້ຮູ້ວ່າມີຫຍັງເກີດຂຶ້ນກັບນາງແດ່.
[12]ເມື່ອເຖິງຜຽນຂອງຍິງສາວແຕ່ລະຄົນຈະຕ້ອງເຂົ້າໄປຫາກະສັດອາຫາສຸເອຣັດ - ຕາມຂໍ້ບັງຄັບສຳລັບຍິງສາວ,
ຄືແຕ່ລະຄົນຕ້ອງຜ່ານການດູແລດ້ານຄວາມສວຍງາມໃຫ້ຄົບເປັນເວລາສິບສອງເດືອນ, ແລ້ວການຊະໂລມກາຍດ້ວຍນ້ຳມັນຫອມ ແລະ
ສຳອາງເວລາຫົກເດືອນ -[13]ເມື່ອຍິງສາວແຕ່ລະຄົນເຂົ້າເຝົ້າກະສັດ, ສິ່ງໃດທີ່ນາງປາຖນາຈະໄດ້ຮັບຈາກເຮືອນຂອງແມ່ຍິງ,
ເພາະນາງສາມາດນຳເຂົ້າຍັງພຣະຣາຊວັງໄດ້.
[14]ໃນຊ່ວງເວລາຕອນແລງ ຍິງນັ້ນເຂົ້າໄປຂ້າງໃນ, ແລະ ນາງກັບອອກມາໃນຕອນເຊົ້າໄປຍັງບ້ານຂອງແມ່ຍິງຫລັງທີສອງ, ແລະ
ໃນການອາລັກຂາຂອງຊາອາຊະກາດ, ຊາຍຕອນຂອງກະສັດ, ຜູ້ດູແລນາງສະຫນົມທັງຫລາຍ. ຍິງນັ້ນຈະບໍ່ໄດ້ກັບອອກມານອກຈາກ
ພຣະອົງຊົງພໍພຣະທັຍໃນຕົວນາງ ແລະ ໃຫ້ນາງກັບເຂົ້າໄປບົວລະບັດອີກຄັ້ງ.
[15]ບັດນີ້ເມື່ອເຖິງເວລາຂອງເອສະເທີ (ລູກສາວຂອງອາບີໄຮ, ລຸງຂອງມໍເດໄກ, ຜູ້ທີ່ໄດ້ຮັບນາງໄປເປັນລູກສາວຂອງຕົນ)
ເພື່ອເຂົ້າໄປບົວລະບັດກະສັດ, ນາງບໍ່ໄດ້ຮ້ອງຂໍສິ່ງໃດເລີຍ ເວັ້ນແຕ່ສິ່ງທີ່ເຮໄກ ຊາຍຕອນຂອງກະສັດ, ໄດ້ແນະນຳແກ່ນາງ,
ຕອນນີ້ເອສະເທີໄດ້ເປັນທີ່ຊື່ນຊອບຂອງທຸກຄົນທີ່ໄດ້ພົບເຫັນນາງ.[16]ເອສະເທີຖືກພາເຂົ້າໄປໃນພຣະຣາຊະວັງຂອງກະສັດອາຫາສຸເອ
ຣັດໃນເດືອນທີສິບ, ຊຶ່ງເປັນເດືອນຂອງເຕເບັດຊຶ່ງເປັນປີທີເຈັດຂອງຣາຊະການຂອງພຣະອົງ
[17]ຫລາຍກ່ວາຍິງສາວຜູ້ອື່ນໆ, ເພິ່ນສວມມົງກຸດໃສ່ຫົວຂອງນາງໃຫ້ເປັນຣາຊີນີແທນຣາຊີນີວາຊະຕີ.
[18]ແລ້ວກະສັດກໍຈັດງານກິນລ້ຽງຢ່າງໃຫຍ່ຫລວງຂຶ້ນເພື່ອເປັນກຽດຕິຍົດແກ່ນາງເອສະເທີ
ແລະໄດ້ເຊີນບັນດາຂ້າຣາຊະການພ້ອມທັງພວກບໍຣິຫານທຸກຄົນຂອງຕົນເຂົ້າມາຮ່ວມໃນງານນີ້
ເພິ່ນໄດ້ປະກາດໃຫ້ມື້ນັ້ນເປັນມື້ຢຸດພັກໃນທຸກໆແຂວງແລະເພິ່ນໄດ້ແຈກຂອງຂວັນໃຫ້ແກ່ທຸກຄົນຢ່າງມີໃຈກ້ວາງຂວາງໃຫ້ສົມເປັນກະສັດ.
[19]ໃນຄັ້ງທີສອງເມື່ອມີການລວບລວມຍິງສາວພົມມະຈັນມາອີກ
ມໍເດໄກກຳລັງນັ່ງຢູ່ທີ່ປະຕູຂອງກະສັດ[20]ເອສະເທີຍັງບໍ່ໄດ້ບອກໃຜດ້ວຍເລື່ອງຂອງນາງຫລືຜູ້ທີ່ກ່ຽວຂ້ອງ ເພາະມໍເດໄກໄດ້ຄຸມນາງໄວ້
ນາງຍັງຄົງເຊື່ອຟັງແລະເຮັດຕາມຄຳແນະນຳຂອງມໍເດໄກ ເຫມືອນເຊັ່ນທີ່ນາງເຄີຍເຊື່ອຟັງຕອນທີ່ເຂົາລ້ຽງດູນາງມາ[21]ໃນຄັ້ງນັ້ນ
ໃນຂະນະທີ່ມໍເດໄກກຳລັງນັ່ງຢູ່ທີ່ປະຕູຫນ້າວັງຂອງກະສັດ ນາຍທະຫານຍາມສອງຄົນຂອງກະສັດຄືບິກທານແລະເຕເຣເຊ
ຜູ້ທີ່ເຝົ້າຍາມທີ່ປະຕູເກີດຄວາມຄຽດແຄ້ນແລະຫາທາງຈະທຳຮ້າຍກະສັດເຊເຊັດ
[22]ເມື່ອເລື່ອງນີ້ໄດ້ເປີດເຜີຍແກ່ມໍເດໄກທ່ານໄດ້ນຳເລື່ອງນີ້ໄປບອກແກ່ພຣະຣາຊີນີເອສະເທີ ແລະເອສະເທີ ຈຶ່ງໄດ້ນຳໄປ
ກາບທູນກະສັດໃນນາມຂອງມໍເດໄກ[23]ເມື່ອເລື່ອງນີ້ໄດ້ຮັບການສອບສວນແລະຢືນຢັນ
ທະຫານທັງສອງຈຶ່ງຖູກຈັບໄປປະຫານໂດຍການແຂວນຄໍທີ່ເທິງຫລັກໄມ້ເຫດການນີ້ໄດ້ຖູກຂຽນບັນທຶກໄວ້ໃນ ຫນັງສືຕໍ່ຫນ້າຂອງກະສັດ.

3 [1]ຫລັງຈາກເຫດການເຫລົ່ານີ້ ກະສັດເຊເຊັດໄດ້ເລື່ອນຍົດໃຫ້ແກ່ ຮາມານ ລູກຊາຍຂອງຮາມເມດາທາເປັນເຊື້ອສາຍຂອງຄົນອາກັກ
ແລະຍົກເຂົາຂຶ້ນໃຫ້ນັ່ງໃນຕໍາແຫນ່ງທີ່ມີອໍານາດເຫນືອບັນດາຂ້າຣາຊະການຮັບໃຊ້ພຣະອົງ[2]ມະຫາດເລັກທຸກຄົນຂອງກະສັດທີ່ຢູ່ປະຕູຂອງກະສັດຈະຄຸເຂົ່າລົງແລ
ຕາມທີ່ກະສັດໄດ້ບັນຊາໃຫ້ພວກເຂົາເຮັດ ແຕ່ມໍເດໄກບໍ່ຍອມຄຸເຂົ່າຫລືເຮັດຄວາມເຄົາຣົບ.

[3]ແລ້ວພວກມະຫາດເລັກຂອງກະສັດຊຶ່ງຢູ່ທີ່ປະຕູຂອງກະສັດເວົ້າກັບມໍເດໄກວ່າ
"ເປັນຫຍັງທ່ານຈຶ່ງຂັດຂືນຄໍາບັນຊາການຂອງກະສັດ?"[4]ພວກເຂົາໄດ້ບອກທ່ານວັນແລ້ວວັນເຫລົ່າແຕ່ທ່ານກໍຍັງປະຕິເສດທີ່ຈະເຮັດຕາມຄວາມຕ້ອງການຂອງພວກເ
ດັ່ງນັ້ນພວກເຂົາຈຶ່ງນໍາເລື່ອງນີ້ໄປບອກກັບຮາມານເພື່ອເບິ່ງມໍເດໄກຍັງຂັດຂືນເຊັ່ນນັ້ນຫລືບໍ່ ເພາະທ່ານໄດ້ບອກພວກເຂົາວ່າທ່ານເປັນຄົນຢິວ.
[5]ເມື່ອຮາມານເຫັນວ່າມໍເດໄກບໍ່ໄດ້ຄຸເຂົ່າແລະກົ້ມກາບເຂົາ ຮາມານກໍເຕັມໄປດ້ວຍຄວາມເຄືອດແຄ້ນ.
[6]ເຂົາຮູ້ສຶກເປັນການເສຍກຽດຕິຍົດຕໍ່ຄວາມຄິດທີ່ຈະຂ້າມໍເດໄກແຕ່ຜູ້ດຽວ
ເພາະພວກມະຫາດເລັກຂອງກະສັດໄດ້ບອກເຂົາວ່າມໍເດໄກມາຈາກຊົນຊາດໃດ
ຮາມານຕ້ອງການທີ່ຈະທໍາຮ້າຍຊົນຊາດຢິວທັງຫມົດຄົນຂອງມໍເດໄກທີ່ຢູ່ທົ່ວທັງອານາຈັກຂອງອາສາອາເຣັບ.
[7]ໃນເດືອນທີຫນຶ່ງ (ຊຶ່ງເປັນເດືອນນີຊານ), ໃນປີທີສິບສອງແຫ່ງຣາຊະການຂອງກະສັດອາຫາສຸເອຣັດ, ຊຶ່ງເອີ້ນກັນວ່າປູຣິມ ຫລື
ສະຫລາກຕໍ່ຫນ້າຮາມານເພື່ອຫາມື້ ແລະເດືອນ. ພວກເຂົາຈັບສະຫລາກໄປເລື້ອຍໆ ຈົນເຖິງສະຫລາກໄດ້ຕົກທີ່ເດືອນສິບສອງ
(ຊຶ່ງເປັນເດືອນອາດາກ).
[8]ແລ້ວຮາມານໄດ້ທູນກະສັດອາຫາສຸເອຣັດວ່າ, "ໃນອານາຈັກຂອງພຣະອົງມີຊົນຊາດຫນຶ່ງທີ່ກະແຈກກະຈາຍແຍກກັນຢູ່ໄປທົ່ວທຸກແຂວງ.
ກົດຫມາຍຂອງພວກເຂົາແຕກຕ່າງຈາກກົດຫມາຍຂອງກະສັດ, ແລະ ຫາກປ່ອຍພວກເຂົາໄວ້ ກໍບໍ່ເກີດ ປະໂຫຍດອັນໃດຕໍ່ກະສັດ.
[9]ຫາກເປັນທີ່ພໍໃຈກະສັດ, ຂໍພຣະອົງໄດ້ຊົງບັນຊາໃຫ້ຂ້າພວກເຂົາເສຍ, ແລະ ຂ້າພຣະເຈົ້າຈະຖວາຍເງິນຈໍານວນຫນຶ່ງຫມື່ນຕະລັນ
ໃຫ້ແກ່ຜູ້ທີ່ຮັບຜິດຊອບພຣະຣາຊກິດຂອງກະສັດ, ເພື່ອໃຫ້ເຂົາເອົາໄປໃສ່ໄວ້ໃນພຣະຄັງຂອງກະສັດ."
[10]ແລ້ວກະສັດຈຶ່ງໄດ້ຖອດແຫວນກາປຣະທັບຈາກມືຂອງພຣະອົງ ແລະ ໄດ້ມອບໃຫ້ແກ່ຮາມານລູກຊາຍຂອງຮາມເມດາທາ ຄົນອາກັກ,
ສັດຕຣູຂອງຄົນຢິວ.[11]ແລ້ວກະສັດໄດ້ເວົ້າກັບຮາມານວ່າ, "ເຮົາຈະເບິ່ງເງິນນັ້ນໄດ້ກັບຄືນມາຍັງເຈົ້າ ແລະຄົນຂອງເຈົ້າ.
ຈົ່ງໄປເຮັດຕາມທີ່ເຈົ້າປາຖນາເຖີດ."
[12]ແລ້ວໃນວັນທີສິບສາມ ຂອງເດືອນທີຫນຶ່ງ, ເສນາຂອງກະສັດຖືກຮ້ອງເຂົ້າໄປ, ແລະຂຽນປະກາດນັ້ນຕາມຄໍາສັ່ງຂອງຮາມານທຸກຢ່າງ
ເຖິງພວກຜູ້ປົກຄອງເມືອງຂອງກະສັດ, ຄືຄົນເຫລົ່ານັ້ນທີ່ຢູ່ທົ່ວທຸກແຂວງ ເຖິງເຈົ້ານາຍຂອງແຕ່ລະແຂວງ ແລະຄົນທັງປວງໃນແຂວງຕ່າງໆ ແລະ
ເຖິງຂ້າຣາຊະການທຸກຄົນ, ເຖິງແຂວງທັງປວງໃນພາສາຂອງພວກເຂົາເອງ, ແລະ ເຖິງສານນີ້ໄດ້ຂຽນໂດຍນາມຂອງກະສັດອາຫາສຸເອຣັດ ແລະ
ປຣະທັບຕາດ້ວຍແຫວນຂອງພຣະອົງ.[13]ຜູ້ສົ່ງສານໄດ້ມອບສານເຫລົ່ານັ້ນດ້ວຍມື ໄປຍັງແຂວງທັງຫມົດຂອງກະສັດ, ເພື່ອສັງຫານ, ເພື່ອຂ້າ,
ແລະທໍາລາຍຄົນຢິວທັງຫມົດ, ຕັ້ງແຕ່ຄົນຫນຸ່ມຈົນເຖິງຄົນແກ່, ເດັກ ແລະແມ່ຍິງ, ພາຍໃນວັນດຽວນັ້ນ - ຄືວັນທີສິບສາມຂອງເດືອນທີສິບສອງ
(ເຊິ່ງເປັນເດືອນອາດາກ) - ແລະ ຄອບຄອງເອົາຊັບສິນຂອງພວກເຂົາ.
[14]ສໍາເນົາຂອງຈົດຫມາຍສານນັ້ນຖືກຕັ້ງເປັນກົດຫມາຍທົ່ວທຸກແຂວງ. ແລະປະກາດໃຫ້ຮູ້ກັນໂດຍທົ່ວໄປແກ່ທຸກຄົນໃນແຂວງນັ້ນ.
ເພື່ອໃຫ້ພວກເຂົາຕຽມຕົວສໍາລັບວັນນີ້.[15]ຜູ້ສົ່ງສານຮີບອອກໄປ ແລະ ເຮັດຕາມຮັບສັ່ງຂອງກະສັດ. ຈົດຫມາຍຍັງໄດ້
ປະກາດໄປຍັງໃນປ້ອມປາການແຫ່ງເມືອງຊູຊາດ້ວຍ. ກະສັດໄດ້ປຣະທັບລົງ ແລະ ຊົງດື່ມກັບຮາມານ,
ແຕ່ຜູ້ຄົນໃນປ້ອມແຫ່ງເມືອງຊູຊາກໍາລັງເກີດຄວາມສັບສົນວຸ້ນວາຍ.

 generated on Tue Jun 17 19:01:42 2025

4 1ເມື່ອມໍເດໄກໄດ້ຮູ້ທຸກຢ່າງທີ່ໄດ້ເກີດຂຶ້ນແລ້ວ, ທ່ານກໍຈີກເສື້ອຜ້າຂອງທ່ານອອກ ແລະໃສ່ຜ້າກະສອບ ແລະໂຮຍຂີ້ເຖົ່າ,
ທ່ານໄດ້ອອກໄປກາງເມືອງຮ້ອງໄຫ້ ແລະ ຄ້ຳຄວນສຽງດັງດ້ວຍຄວາມຂົມຂື່ນ. 2ທ່ານໄດ້ຂຶ້ນໄປເຖິງແຕ່ປະຕູຂອງກະສັດເທົ່ານັ້ນ
ເພາະໃຜກໍຕາມທີ່ໃສ່ຜ້າກະສອບຈະບໍ່ໄດ້ຮັບອານຸຍາດໃຫ້ຜ່ານເຂົ້າໄປ. 3ໃນທຸກແຂວງ, ທີ່ຈົດຫມາຍ ແລະຄຳບັນຊາຂອງກະສັດໄດ້ໄປເຖິງ
ກໍເກີດຄວາມໂສກເສົ້າເສຍໃຈຢ່າງໃຫຍ່ຫລວງ ທ່າມກາງຄົນຢິວ, ມີການອົດອາຫານ, ການຮ້ອງໄຫ້, ແລະ ການຄ້ຳຄວນ.
ມີຄົນຫລາກຫລາຍໃສ່ຜ້າກະສອບ ແລະໂຮຍຂີ້ເຖົ່າ.

4ເມື່ອພວກສາວໃຊ້ ແລະພວກນາງກຳນັນຂອງພຣະນາງເອສະເທີ ພວກນາງໄດ້ມາທູນເລື່ອງນີ້ກັບພຣະນາງ, ພຣະຣາຊີນີກໍຊົງກັງວົນໃຈຫລາຍ.
ນາງຈຶ່ງສົ່ງເສື້ອຄຸມໄປໃຫ້ກັບມໍເດໄກ (ເພື່ອທີ່ທ່ານຈະໄດ້ຖອດຜ້າກະສອບອອກ), ແຕ່ທ່ານປະຕິເສດບໍ່ຮັບເສື້ອຄຸມທີ່ນາງສົ່ງມາໃຫ້.
5ດັ່ງນັ້ນນາງເອສະເທີ ຈຶ່ງຮ້ອງຮາທາດ, ຊາຍຕອນຂອງພຣະນາງ ຜູ້ທີ່ກະສັດໄດ້ແຕ່ງຕັ້ງໃຫ້ມາບົວລະບັດຮັບໃຊ້ພຣະນາງ.
ນາງໄດ້ສົ່ງເຂົາໄປຫາມໍເດໄກເພື່ອຖາມວ່າເກີດຫຍັງຂຶ້ນ ແລະເຮັດເຊັ່ນນັ້ນເຮັດຫຍັງ.
6ດັ່ງນັ້ນ ຮາທາດຈຶ່ງໄດ້ອອກໄປຫາມໍເດໄກທີ່ສີ່ແຍກຂອງກາງເມືອງ
ດ້ານຫນ້າປະຕູຂອງກະສັດ 7ມໍເດໄກໄດ້ລາຍງານເລື່ອງລາວທັງຫມົດທີ່ເກີດຂຶ້ນກັບເຂົາ, ແລະ
ເລື່ອງຈຳນວນເງິນທັງຫມົດທີ່ຮາມານສັນຍາຖວາຍໃຫ້ແກ່ກະສັດເພື່ອເອົາໄປໃສ່ໃນຄັງຂອງພະອົງ, ເພື່ອຈະໄດ້ສັງຫານຊົນຊາດຢິວທັງຫມົດ.
8ທ່ານຍັງໄດ້ມອບສຳເນົາຊອງຈົດຫມາຍເລື່ອງການທຳລາຍຊົນຊາດຢິວ ທີ່ສົ່ງໄປທົ່ວຊູຊາໃຫ້ກັບຊາຍຕອນ.
ທ່ານເຮັດເຊັ່ນນີ້ຮາທາດຈະໄດ້ນຳໄປມອບໃຫ້ນາງເອສະເທີ ແລະທ່ານຕ້ອງການໃຫ້ນາງຮັບຜິດຊອບເລື່ອງການເຂົ້າເຝົ້າກະສັດ
ເພື່ອອ້ອນວອນກະສັດຂໍຄວາມຊື່ນຊອບເມດຕາ, ແລະ ຂໍຮ້ອງແທນຊົນຊາດຂອງນາງ.
9ດັ່ງນັ້ນຮາທາດຈຶ່ງກັບໄປຫາເອສະເທີ ແລະໄດ້ທູນເລື່ອງທີ່ມໍເດໄກໄດ້ບອກມານັ້ນ. 10ແລ້ວເອສະເທີກໍຝາກຄຳຂອງນາງໄປກັບເຂົາເຖິງມໍເດໄກ.
11ນາງໄດ້ເວົ້າວ່າ, "ຂ້າຣາຊະການຂອງກະສັດ ແລະ ປະຊາຊົນທົ່ວທຸກແຂວງຮູ້ດີວ່າ ບໍ່ວ່າຊາຍ ຫລື
ຍິງໃດທີ່ເຂົ້າໄປໃນເດີ່ນຊັ້ນໃນຂອງກະສັດໂດຍບໍ່ມີການຮັບສັ່ງມີກົດພຽງຂໍ້ດຽວເທົ່ານັ້ນຄື ຜູ້ນັ້ນຈະຕ້ອງຖືກປະຫານຊີວິດ
ເວັ້ນແຕ່ຜູ້ທີ່ກະສັດໄດ້ຊົງຍື່ນໄມ້ເທົ້າທອງຄຳເພື່ອໄວ້ຊີວິດຜູ້ນັ້ນ.
ຂ້ານ້ອຍກໍບໍ່ໄດ້ຖືກຮ້ອງໃຫ້ເຂົ້າພົບກະສັດເປັນເວລາສາມສິບວັນແລ້ວ." 12ດ້ວຍເຫດນັ້ນຮາທາດຈຶ່ງລາຍງານຄຳຂອງນາງເອສະເທີແກ່ມໍເດໄກ.
13ມໍເດໄກຈຶ່ງຝາກຂໍ້ຄວາມກັບໄປວ່າ: "ທ່ານຕ້ອງບໍ່ຄິດວ່າເຈົ້າ ຈະລອດພົ້ນຈາກການທຳລາຍຊົນຊາດຢິວທັງຫມົດເພາະທ່ານຢູ່ໃນ
ຣາຊະວັງຂອງກະສັດນັ້ນ. 14ຖ້າຫາກທ່ານຍັງມິດງຽບເຊັ່ນນີ້ຕໍ່ໄປ, ການຊ່ວຍເຫລືອ ແລະການຊ່ວຍກູ້ຂອງຊົນຊາດຢິວຄົງມາຈາກທີ່ອື່ນ, ແຕ່ທ່ານ
ແລະ ຄອບຄົວຂອງທ່ານເອງກໍຕ້ອງພິນາດດ້ວຍເຊັ່ນດຽວກັນ. ບາງທີການທີ່ທ່ານໄດ້ຮັບຕຳແຫນ່ງຣາຊີນີນີ້ ກໍເພື່ອການນີ້ກໍເປັນໄດ້ ໃຜຈະຮູ້ໄດ້?"
15ແລ້ວນາງເອສະເທີຈຶ່ງສົ່ງຂໍ້ຄວາມໄປຫາມໍເດໄກວ່າ, 16"ຖ້າເຊັ່ນນັ້ນ ທ່ານຈົ່ງໄປຮວບຮວມຊາວຢິວທຸກຄົນທີ່ຢູ່ໃນຊູຊາ, ແລະ
ຈົ່ງຖືສິນອົດອາຫານເພື່ອຂ້ານ້ອຍ. ຢ່າໄດ້ກິນ ຫລື ດື່ມເປັນເວລາສາມວັນສາມຄືນ. ຂ້ານ້ອຍ
ແລະສາວໃຊ້ຂອງຂ້ານ້ອຍກໍຈະອົດອາຫານດ້ວຍເຊັ່ນກັນ. ແລ້ວຂ້ານ້ອຍຈະໄປເຂົ້າເຝົ້າກະສັດ, ເຖິງແມ່ນວ່າຈະເປັນການຜິດກົດຫມາຍກໍຕາມ,
ແລະແມ່ນວ່າຂ້ອຍຕ້ອງພິນາດ, ຂ້ອຍກໍຈະພິນາດ." 17ແລ້ວມໍເດໄກຈຶ່ງໄປເຮັດຕາມຄຳທີ່ນາງເອສະເທີຮັບສັ່ງໃຫ້ເຮັດ.

5 [1]ຫລັງຈາກນັ້ນສາມວັນ, ນາງເອສະເທີຈຶ່ງໄດ້ນຸ່ງຊຸດພຣະຣາຊິນີ ແລະ ໄດ້ເຂົ້າມາໃນເດີ່ນຊັ້ນໃນຂອງກະສັດ ດ້ານຫນ້າຣາຊະວັງຂອງກະສັດ,
ກະສັດຊົງປະທັບເທິງບັນລັງໃນພຣະຣາຊວັງ, ຊຶ່ງຫັນຫນ້າໄປທາງເຂົ້າຂອງພຣະຣາຊວັງ.[2]ເມື່ອກະສັດໄດ້ຫລຽວເຫັນພຣະຣາຊິນີເອສະເທີ
ຢືນຢູ່ໃນເດີ່ນຫນ້າວັງ, ພຣະນາງກໍໄດ້ຮັບຄວາມອະນຸຍາດໃນທາງສາຍຕາຂອງພຣະອົງ.
ພຣະອົງຈຶ່ງໄດ້ຊົງຍື່ນໄມ້ຄອນເທົ້າທອງຄໍາໃນມືຂອງພຣະອົງໃຫ້ນາງເອສະເທີ. ດັ່ງນັ້ນນາງເອສະເທີ ກໍໄດ້ເຂົ້າມາ ແລະ
ແຕະທີ່ໄມ້ຄອນເທົ້າຂອງພຣະອົງນັ້ນ.

[3]ແລ້ວພຣະອົງຈຶ່ງໄດ້ຖາມນາງວ່າ, "ເຈົ້າປາຖນາສິ່ງໃດນໍ, ພຣະຣາຊິນີເອສະເທີ? ເຈົ້າປະສົງສິ່ງໃດ? ຫາກເຖິງເຄິ່ງອານາຈັກຂອງເຮົາ,
ເຮົາກໍຈະໃຫ້ກັບເຈົ້າ."[4]ນາງເອສະເທີຈຶ່ງເວົ້າກັບພຣະອົງວ່າ, "ຖ້າຫາກຂ້ານ້ອຍ ຊົງເປັນທີ່ພໍພຣະທັຍຂອງພຣະອົງ, ຂໍພຣະອົງລົງມາ
ພ້ອມຮາມານໃນວັນນີ້ທີ່ງານລ້ຽງສະຫລອງທີ່ຂ້ານ້ອຍໄດ້ຈັດຕຽມໄວ້ໃຫ້ກັບເຂົາ."
[5]ກະສັດຈຶ່ງເວົ້າວ່າ, "ໄປນໍາຮາມານມາໂດຍໄວ, ແລະ ເຮັດຕາມທີ່ເອສະເທີໄດ້ເວົ້າ. "ດັ່ງນັ້ນກະສັດ ແລະ
ຮາມານກໍໄປງານລ້ຽງສະຫລອງທີ່ນາງເອສະເທີໄດ້ຈັດຕຽມໄວ້.[6]ໃນຂະນະທີ່ກໍາລັງເຫຍັ້ນເຫລົ້າອາງຸ່ນໃນງານລ້ຽງສະຫລອງຢູ່ນັ້ນ,
ກະສັດກໍໄດ້ຖາມນາງເອສະເທີວ່າ "ຄວາມປາຖນາຂອງເຈົ້າຄືສິ່ງໃດ? ເຮົາຈະປຣະທານໃຫ້ ເຈົ້າປະສົງສິ່ງໃດ? ເຖິງເຄິ່ງອານາຈັກ
ເຮົາກໍຈະໃຫ້ເຈົ້າ."
[7]ນາງເອສະເທີຈຶ່ງທູນຕອບວ່າ, "ຄວາມປາຖນາ ແລະຄໍາຮ້ອງຂໍຂອງຂ້ານ້ອຍນັ້ນຄື,[8]ຖ້າຫາກຂ້ານ້ອຍເປັນທີ່ໂປດປານໃນສາຍຕາຂອງພຣະອົງ
ແລະເປັນທີ່ພໍພຣະທັຍຂອງພະອົງທີ່ຈະມອບໃຫ້ຕາມຄວາມປາຖນາຂອງຂ້ານ້ອຍ, ແລະ ໃຫ້ກຽດແກ່ຄໍາຂໍຂອງຂ້ານ້ອຍ, ກໍຂໍເຊີນພຣະອົງ
ແລະຮາມານຊົງມາຮ່ວມງານລ້ຽງທີ່ຂ້ານ້ອຍໄດ້ຈັດຕຽມສໍາລັບພຣະອົງໃນມື້ອື່ນ ແລະ ຂ້ານ້ອຍຈະຕອບຄໍາຖາມຂອງພຣະອົງ."
[9]ຮາມານກັບໄປມື້ນັ້ນດ້ວຍຄວາມດີໃຈ ແລະ ມີອາລົມດີ. ແຕ່ເມື່ອຮາມານເຫັນມໍເດໄກທີ່ຫນ້າປະຕູຂອງກະສັດ, ກໍເຫັນວ່າມໍເດໄກບໍ່ໄດ້ຢືນຂຶ້ນ
ຫລືຕົວສັ່ນສະທ້ານດ້ວຍຄວາມຢ້ານຕໍ່ຫນ້າເຂົາ, ຄວາມຄຽດຮ້າຍຕໍ່ມໍເດໄກກໍເກີດຂຶ້ນຢູ່ພາຍໃນເຂົາ.[10]ເຖິງຢ່າງໃດກໍດີ,
ຮາມານໄດ້ຫ້າມໃຈຕົວເອງ ແລະ ກັບບ້ານຂອງເຂົາ. ແລ້ວຮາມານກໍສົ່ງຄົນໄປເຊີນສະຫາຍຂອງເຂົາມາ ແລະຮວມຕົວກັນພ້ອມທັງ
ນາງເຊເຣເຊ ເມຍຂອງເຂົາ.[11]ແລ້ວຮາມານກໍເລົ່າໃຫ້ພວກເຂົາຟັງເຖິງຄວາມຮັ່ງມີຂອງເຂົາ, ຈໍານວນລູກຊາຍທັງຫລາຍຂອງເຂົາ, ແລະ
ທີ່ກະສັດໄດ້ຊົງເລື່ອນຕໍາແຫນ່ງທັງຫລາຍຊຶ່ງກະສັດໄດ້ໃຫ້ກຽດຕິຍົດແກ່ເຂົາ, ແລະ ອໍານາດທີ່ເຂົາໄດ້ຮັບເຫນືອຂ້າຣາຊະການ ແລະ
ຂ້າຮັບໃຊ້ທັງປວງຂອງກະສັດ.
[12]ຮາມານໄດ້ກ່າວວ່າ "ພຣະຣາຊິນີເອສະເທີ ບໍ່ໄດ້ຊົງເຊີນຜູ້ໃດ ນອກຈາກຕົວຂ້າພຣະເຈົ້າ ເພື່ອໄປຮ່ວມສະຫລອງກັບກະສັດ.
ໃນງານລ້ຽງທີ່ນາງໄດ້ຈັດຕຽມໄວ້ ມື້ອື່ນຂ້າພຣະເຈົ້າກໍຍັງໄດ້ຮັບເຊີນໃຫ້ໄປອີກຄັ້ງພ້ອມດ້ວຍກະສັດ.
[13]ແຕ່ທັງຫມົດນີ້ກໍບໍ່ມີຄ່າຫຍັງກັບຕົວຂ້າພຣະເຈົ້າ, ຕາບໃດທີ່ຂ້າພຣະເຈົ້າຍັງເຫັນມໍເດໄກຄົນຢິວຍັງນັ່ງຢູ່ທີ່ປະຕູພຣະຣາຊະວັງຂອງກະສັດນັ້ນ."
[14]ແລ້ວເຊເຣເຊ ເມຍຂອງຮາມານກໍສະເຫນີຮາມານກັບສະຫາຍເຂົາວ່າ, "ໃຫ້ພວກເຂົາສ້າງບ່ອນແຂວນຄໍສູງຊາວສອງແມັດ ແລະ
ໃນຕອນເຊົ້າ ຈົ່ງທູນກະສັດເພື່ອໃຫ້ພວກເຂົານໍາມໍເດໄກໄປແຂວນຄໍທີ່ນັ້ນ. ເພື່ອທີ່ທ່ານຈະໄດ້ໄປງານລ້ຽງສະຫລອງກັບກະສັດຢ່າງສະບາຍໃຈ."
ຄໍາສະເຫນີເປັນທີ່ພໍໃຈແກ່ຮາມານ ແລະເຂົາຈຶ່ງໄດ້ສັ່ງຄົນໄປເຮັດບ່ອນແຂວນຄໍຕຽມໄວ້.


generated on Tue Jun 17 19:01:42 2025

6 [1]ໃນຄືນນັ້ນກະສັດບໍ່ສາມາດນອນໄດ້. ພະອົງຈຶ່ງໄດ້ຊົງສັ່ງໃຫ້ຂ້າຮັບໃຊ້ນຳບັນທຶກລາຍງານໃນຣາຊະການຂອງພຣະອົງມາ, ແລະ
ພວກເຂົາກໍໄດ້ອ່ານອອກສຽງດັງໃຫ້ກະສັດຟັງ.[2]ໃນບັນທຶກນັ້ນພົບວ່າມີເຫດການທີ່ມໍເດໄກ ໄດ້ທູນເລື່ອງບິກທານາ ແລະ ເຕເຣເຊ,
ຊາຍຕອນຂອງພຣະອົງສອງຄົນທີ່ໄດ້ເຝົ້າຍາມຕຶງປະຕູຂອງກະສັດ ຊຶ່ງໄດ້ພະຍາຍາມວາງແຜນລອບສັງຫານກະສັດອາຫາສຸເອຣັດ.
[3]ກະສັດໄດ້ຖາມວ່າ, "ມໍເດໄກໄດ້ຮັບກຽດ ຫລືການຍ້ອງຍໍເປັນທີ່ຈົດຈຳໃດໆເພາະເລື່ອງນີ້ຫລືບໍ່?"
ແລ້ວຂ້າຮັບໃຊ້ທີ່ໄດ້ບົວລະບັດຮັບໃຊ້ພຣະອົງຢູ່ ໄດ້ທູນຕອບວ່າ, "ຍັງບໍ່ໄດ້ເຮັດຫຍັງໃຫ້ເຂົາເລີຍ."

[4]ກະສັດກ່າວວ່າ, "ໃຜຢູ່ໃນເດີ່ນດ້ານຫນ້າ?" ຂະນະນັ້ນຮາມານໄດ້ເຂົ້າມາໃນເດີ່ນຂອງຣາຊະວັງຂອງກະສັດ
ເພື່ອທູນພຣະອົງເລື່ອງທີ່ຈະນຳມໍເດໄກໄປແຂວນຄໍທີ່ບ່ອນແຂວນຄໍທີ່ເຂົາໄດ້ຈັດຕຽມເອົາໄວ້.[5]ຂ້າຮັບໃຊ້ຂອງກະສັດໄດ້ທູນຕໍ່ພະອົງວ່າ,
"ຮາມານກຳລັງຢູ່ທີ່ເດີ່ນດ້ານຫນ້າ." ກະສັດຈຶ່ງໄດ້ບອກວ່າ, "ໃຫ້ເຂົາເຂົ້າມາ."[6]ເມື່ອຮາມານໄດ້ເຂົ້າມາແລ້ວ, ກະສັດໄດ້ເວົ້າກັບເຂົາວ່າ,
"ຊາຍທີ່ໄດ້ຮັບຄວາມໂປດປານຈາກກະສັດຄວນໄດ້ຮັບສິ່ງໃດເພື່ອໃຫ້ກຽດຕອບແທນການກະທຳຂອງເຂົາ?" ຮາມານໄດ້ຄິດຢູ່ໃນໃຈ,
"ມີໃຜອີກທີ່ໄດ້ຮັບຄວາມໂປດປານ ແລະກຽດຕິຍົດຈາກກະສັດຫລາຍໄປກວ່າຕົວຂ້ອຍ?"
[7]ຮາມານຈຶ່ງໄດ້ທູນຕໍ່ກະສັດວ່າ, "ສຳລັບຊາຍຜູ້ນັ້ນຊຶ່ງກະສັດໄດ້ຊົງໂປດປານ ແລະ ໃຫ້ກຽດແກ່ເຂົາ,[8]ຂໍໃຫ້ນຳເຄື່ອງເອ້ທີ່ກະສັດເຄີຍໃສ່ ແລະ
ມ້າທີ່ພຣະອົງເຄີຍຂີ່ ແລະມົງກຸດທີ່ໃສ່ເທິງມ້ານັ້ນມາ.[9]ແລ້ວໃຫ້ເຂົາແຕ່ງຕົວດ້ວຍຊຸດຊົງ ແລະ
ປຣະທານມ້າແກ່ຂ້າຣາຊະການສູງສຸດຂອງກະສັດ. ໃຫ້ພວກເຂົາແຕ່ງກາຍຊາຍຄົນນັ້ນຄືຜູ້ທີ່ກະສັດຊົງໂປດປານ ແລະໃຫ້ກຽດແກ່ເຂົາ,
ໃຫ້ພວກເຂົາພາຊາຍຄົນນັ້ນນັ່ງເທິງມ້າ ແລະເດີນໄປຕາມທາງໃນເມືອງ. ໃຫ້ມີປະກາດນຳຫນ້າເຂົາວ່າ 'ນີ້ຄືຜູ້ທີ່ກະສັດໄດ້ຊົງໂປດປານ
ເຂົາກໍເປັນເຊັ່ນນີ້ແຫລະ!'"
[10]ແລ້ວກະສັດກໍໄດ້ກ່າວກັບຮາມານວ່າ, "ຈົ່ງຮີບໄປ, ນຳເອົາຊຸດຂອງເຮົາ ແລະ ມ້າມາເຫມືອນທີ່ທ່ານໄດ້ກ່າວມານັ້ນ,
ແລະຈົ່ງເຮັດສິ່ງນັ້ນແກ່ມໍເດໄກ ຊາຍຊາວຢິວຜູ້ທີ່ນັ່ງຢູ່ທີ່ປະຕູຂອງກະສັດ. ຢ່າໃຫ້ຂາດໄປແມ່ນແຕ່ສິ່ງດຽວ
ຕາມທີ່ທ່ານໄດ້ກ່າວມານັ້ນ."[11]ແລ້ວຮາມານຈຶ່ງໄດ້ນຳຊຸດ ແລະ ມ້າມາ. ເຂົາໄດ້ໃສ່ຊຸດໃຫ້ກັບມໍເດໄກ ແລະ ໄດ້ພາເຂົານັ່ງເທິງມ້າ ແລະ
ຜ່ານໄປກາງເມືອງ. ເຂົາໄດ້ຮ້ອງປະກາດນຳຫນ້າເຂົາວ່າ "ນີ້ຄືຜູ້ທີ່ກະສັດໄດ້ຊົງໂປດປານ ເຂົາກໍເປັນເຊັ່ນນີ້ແຫລະ!"
[12]ມໍເດໄກໄດ້ກັບໄປທີ່ປະຕູຂອງກະສັດ. ແຕ່ຮາມານໄດ້ຮີບລຸກກັບໄປຍັງບ້ານຂອງເຂົາ, ເອົາຜ້າຄຸມຫົວຂອງຕົນ ແລະຮ້ອງຄຳຄວນ.
[13]ຮາມານໄດ້ບອກທຸກຢ່າງທີ່ເກີດຂຶ້ນແກ່ ເຊເນເຊເມຍຂອງເຂົາ ແລະ ພວກເພື່ອນຂອງເຂົາທີ່ຢູ່ທີ່ນັ້ນ.
ແລ້ວຊາຍຄົນຫນຶ່ງຂອງເຂົາຊຶ່ງເປັນຜູ້ມີສະຕິປັນຍາ ແລະເຊເຣເຊເມຍຂອງເຂົາ, ກໍໄດ້ເວົ້າກັບເຂົາວ່າ, "ຫາກມໍເດໄກ,
ຄືຄົນທີ່ທ່ານໄດ້ລົ້ມລົງຕໍ່ຫນ້າເຂົາຄືຊາວຢິວ, ທ່ານບໍ່ມີວັນຊະນະເຂົາແນ່ນອນ, ແຕ່ທ່ານຈະລົ້ມລົງ
ແລະພ່າຍແພ້ຕໍ່ເຂົາ."[14]ໃນຂະນະທີ່ພວກເຂົາກຳລັງໄດ້ເວົ້າກັນຢູ່ນັ້ນ, ທະຫານຂອງກະສັດໄດ້ມາເຖິງ.
ພວກເຂົາໄດ້ຮີບຮັບຮາມານເພື່ອພາໄປຍັງງານລ້ຽງສະຫລອງທີ່ນາງເອສະເທີໄດ້ຊົງຈັດຕຽມໄວ້.

 generated on Tue Jun 17 19:01:42 2025

7 [1]ແລ້ວກະສັດກໍໄດ້ໄປກັບຮາມານ ໄປຍັງງານລ້ຽງສະຫລອງຂອງພຣະຣາຊີນີເອສະເທີ.[2]ໃນວັນທີສອງນັ້ນ, ໃນຂະນະທີ່ພວກເຂົາໄດ້
ກໍາລັງດື່ມເຫລົ້າອະງຸ່ນຢູ່ນັ້ນ, ກະສັດກໍໄດ້ຖາມນາງເອສະເທີວ່າ, "ຄໍາຮ້ອງຂໍຂອງເຈົ້າຄືສິ່ງໃດ, ພະຣາຊີນີເອສະເທີ?
ເຖິງເຄິ່ງອານາຈັກຂອງເຮົາ, ເຮົາກໍຈະມອບໃຫ້ແກ່ເຈົ້າ."

[3]ແລ້ວພຣະຣາຊີນີເອສະເທີຈຶ່ງໄດ້ທູນຕອບວ່າ, "ຂ້າແດ່ກະສັດ, ຫາກຂ້ານ້ອຍເປັນທີ່ໂປດປານໃນສາຍຕາຂອງພຣະອົງ, ແລະ
ຫາກເປັນທີ່ພໍພະທັຍຂອງພຣະອົງ, ຂໍຊົງໄວ້ຊີວິດຂອງຂ້ານ້ອຍດ້ວຍເຖີດ - ນີ້ຄືຄໍາຮ້ອງຂອງຂ້ານ້ອຍ, ແລະ ຂ້ານ້ອຍທູນຂໍຊີວິດຂອງຂ້ານ້ອຍ
ແລະຊົນຊາດຂອງຂ້ານ້ອຍດ້ວຍ.[4]ເພາະພວກເຮົາໄດ້ຖືກຂາຍ, ທັງຂ້ານ້ອຍ ແລະ ປະຊາຊົນຂອງຂ້ານ້ອຍໃຫ້ຖືກທໍາລາຍ ຖືກຂ້າ, ແລະ
ລ້າງຜານເຜົ່າພັນ. ຫາກພວກເຮົາຖືກຂາຍເພື່ອໄປເປັນທາດ ບໍ່ວ່າຜູ້ຊາຍ ຫລືຜູ້ຍິງ, ຂ້ານ້ອຍຄົງເກັບງຽບເອົາໄວ້, ແລະ ບໍ່ທຸກຮ້ອນແຕ່ຢ່າງໃດ
ເພາະນັ້ນອາດຈະລົບກວນກະສັດ."[5]ແລ້ວກະສັດອາຫາສຸເອຣັດ ຈຶ່ງໄດ້ຖາມພຣະຣາຊີນີເອສະເທີວ່າ, "ເຂົາຄືຜູ້ໃດ? ຄົນນັ້ນຢູ່ທີ່ໃດ
ທີ່ຫົວໃຈຂອງເຂົາຊ່າງຄິດຮ້າຍຫຍັງເຊັ່ນນັ້ນ?"
[6]ເອສະເທີກາບທູນວ່າ, "ຊາຍຊົ່ວ ແລະ ສັດຕຣູນັ້ນຄືຮາມານ, ຜູ້ຊົ່ວຮ້າຍຄົນນີ້!" ແລ້ວຮາມານກໍເກີດຄວາມຢ້ານຕໍ່ຫນ້າຂອງກະສັດ
ແລະພຣະຣາຊີນີ.[7]ກະສັດກໍໄດ້ຊົງລຸກຂຶ້ນດ້ວຍຄວາມໂກດຮ້າຍຈາກການດື່ມເຫລົ້າອາງຸ່ນທີ່ງານລ້ຽງສະຫລອງ
ແລະໄດ້ອອກໄປທີ່ສວນຂອງຣາຊະວັງ, ແຕ່ຮາມານນັ້ນໄດ້ຄຸກເຂົ່າ ຮ້ອງຂໍຊີວິດຂອງເຂົາຈາກພຣະຣາຊີນີເອສະເທີ.
ເຂົາຮູ້ແລ້ວວ່າກະສັດຊົງຕັດສິນໂທດເຂົາແລ້ວ.
[8]ເມື່ອກະສັດໄດ້ກັບມາຈາກສວນໃນພຣະຣາຊະວັງເຂົ້າມາໃນຫ້ອງທີ່ກໍາລັງດື່ມເຫລົ້າອາງຸ່ນນັ້ນ. ຮາມານນັ້ນລົ້ມລົງຢູ່ທີ່ປຣະທັບ
ບ່ອນທີ່ນາງເອສະເທີໄດ້ປຣະທັບຢູ່. ກະສັດໄດ້ເວົ້າວ່າ, "ເຂົາຈະທໍາຮ້າຍພຣະຣາຊີນີໃນບ້ານຂອງເຮົາບໍ?"
ທັນທີທີ່ກະສັດໄດ້ເວົ້າເຊັ່ນນັ້ນຈາກປາກຂອງພຣະອົງ, ຂ້າຮັບໃຊ້ຂອງພຣະອົງກໍໄດ້ເຂົ້າມາປິດຫນ້າຂອງຮາມານ.
[9]ແລ້ວຮັກໂບນາ, ຂ້າຣາຊະການຄົນຫນຶ່ງທີ່ບົວລະບັດພຣະອົງໄດ້ທູນວ່າ, "ມີບ່ອນແຂວນຄໍສູງຊາວສອງແມັດ ທີ່ຂ້າງບ້ານຂອງຮາມານ
ເຂົາໄດ້ສັ່ງໃຫ້ຕຽມເອົາໄວ້ສໍາລັບມໍເດໄກ, ຜູ້ທີ່ໄດ້ກ່າວປົກປ້ອງຊີວິດຂອງພະອົງ. "ກະສັດຈຶ່ງໄດ້ເວົ້າວ່າ
"ແຂວນເຂົາຢູ່ທີ່ນັ້ນສາ."[10]ດັ່ງນັ້ນພວກເຂົາກໍແຂວນຄໍຮາມານ ທີ່ບ່ອນແຂວນຄໍນັ້ນທີ່ເຂົາໄດ້ຕຽມເອົາໄວ້ໃຫ້ມໍເດໄກ.
ແລ້ວຄວາມໂກດແຄ້ນຂອງກະສັດກໍໄດ້ສະຫງົບລົງ.


generated on Tue Jun 17 19:01:42 2025

# 8

[1]ໃນວັນນັ້ນ ກະສັດອາຫາສຸເອຣັດໄດ້ມອບຊັບສິນຂອງຮາມານ, ສັດຕຣູຂອງພວກຢິວໃຫ້ແກ່ພຣະຣາຊີນີເອສະເທີ ແລະ
ມໍເດໄກກໍໄດ້ເລີ່ມບົວລະບັດຮັບໃຊ້ກະສັດ, ເພາະນາງເອສະເທີໄດ້ທູນກະສັດວ່າ ມໍເດໄກກ່ຽວຂ້ອງກັບນາງຢ່າງໃດ.
[2]ກະສັດໄດ້ເອົາແຫວນປຣະທັບຕາຂອງພຣະອົງ, ຊຶ່ງພຣະອົງໄດ້ຊົງຍຶດຄືນມາຈາກຮາມານ, ແລະມອບໃຫ້ກັບມໍເດໄກ. ແລ້ວນາງເອສະເທີ
ກໍໄດ້ແຕ່ງຕັ້ງມໍເດໄກໃຫ້ເປັນຜູ້ດູແລເຫນືອຊັບສົມບັດຕ່າງໆ ຂອງຮາມານ.

[3]ແລ້ວນາງເອສະເທີກໍໄດ້ທູນກະສັດອີກຄັ້ງ. ນາງໄດ້ຫມູບຫນ້າລົງເທິງພື້ນ ແລະ
ຮ້ອງໄຫ້ໃນຂະນະທີ່ນາງໄດ້ຊົງອ້ອນວອນຕໍ່ພຣະອົງໃຫ້ຢຸດຕິແຜນການອັນຊົ່ວຮ້າຍຂອງຮາມານຄົນອາກັກ, ຊຶ່ງເປັນອຸບາຍຊົ່ວຮ້າຍ
ທີ່ເຂົາໄດ້ວາງແຜນເພື່ອຕໍ່ຕ້ານຄົນຢິວ.[4]ແລ້ວກະສັດກໍໄດ້ຊົງຍື່ນໄມ້ຄ້ອນເທົ້າທອງຄຳຂອງພຣະອົງໃຫ້ແກ່ເອສະເທີ,
ແລ້ວນາງກໍໄດ້ຊົງລຸກຂຶ້ນຢືນຕໍ່ຫນ້າກະສັດ.
[5]ນາງໄດ້ທູນວ່າ, "ຫາກສິ່ງນີ້ເປັນທີ່ພໍພຣະທັຍກະສັດ, ແລະ ຖ້າຫາກຂ້ານ້ອຍເປັນທີ່ໂປດປານໃນສາຍຕາຂອງພຣະອົງ,
ຫາກຊົງເຫັນວ່າສິ່ງນີ້ເປັນສິ່ງທີ່ຖືກຕ້ອງຕໍ່ກະສັດ, ແລະ ຫາກຂ້ານ້ອຍເປັນທີ່ໂປດປານໃນສາຍຕາຂອງພຣະອົງ,
ຂໍໄດ້ຊົງໃຫ້ມີການຂຽນເປັນທາງການເພື່ອຍົກເລີກສານທີ່ຂຽນໂດຍຮາມານລູກຊາຍຂອງຮາມເມດາທາ ຄົນອາກັກ,
ຈົດຫມາຍທີ່ເຂົາໄດ້ຂຽນເພື່ອທຳລາຍຄົນຢິວທີ່ອາສັຍຢູ່ທົ່ວທຸກແຂວງຂອງກະສັດ.
[6]ເພາະຂ້ານ້ອຍຈະສາມາດທົນເບິ່ງພັຍພິບັດທີ່ຈະເກີດແກ່ຄົນຂອງຂ້ານ້ອຍໄດ້ຢ່າງໃດກັນ?
ຂ້ານ້ອຍທົນເຫັນພວກຍາດພີ່ນ້ອງຂອງຂ້ານ້ອຍຖືກທຳລາຍໄດ້ຢ່າງໃດ?"
[7]ກະສັດອາຫາສຸເອຣັດ ຈຶ່ງໄດ້ເວົ້າກັບພຣະຣາຊີນີເອສະເທີ ແລະ ມໍເດໄກຄົນຢິວວ່າ, "ເບິ່ງເຖີດ,
ເຮົາໄດ້ມອບບ້ານເຮືອນຂອງຮາມານໄວ້ແກ່ເອສະເທີແລ້ວ, ແລະ ເຮົາໄດ້ແຂວນຮາມານເທິງບ່ອນແຂວນຄໍເພາະເຂົາຄິດທີ່ຈະໂຈມຕີພວກຢິວ,
[8]ຈົ່ງຂຽນປະກາດອີກສະບັບຫນຶ່ງສຳລັບຄົນຢິວໃນນາມຂອງກະສັດ ແລະປຣະທັບຕາດ້ວຍແຫວນຂອງກະສັດ.
ເພາະປະກາດທີ່ໄດ້ຂຽນໄປແລ້ວນັ້ນໃນນາມຂອງກະສັດ ແລະປຣະທັບດ້ວຍແຫວນຕຣາຂອງກະສັດບໍ່ສາມາດເພີກຖອນໄດ້."
[9]ແລ້ວເລຂາທິການຂອງກະສັດກໍໄດ້ຖືກຮ້ອງເຂົ້າມາໃນເວລານັ້ນ, ໃນເດືອນທີ່ສາມ, ຄືເດືອນຊີວານ, ໃນວັນທີຊາວສາມຂອງເດືອນນັ້ນ.
ປະກາດກໍໄດ້ຂຽນຂຶ້ນຕາມມໍເດໄກໄດ້ບັນຊາກ່ຽວກັບພວກຢິວ. ເຖິງບັນດາຜູ້ປົກຄອງແຂວງຕ່າງໆ, ເຖິງຂ້າຣາຊະການ ແລະ
ຜູ້ປົກຄອງເມືອງໃນແຂວງຕ່າງໆ ທີ່ຢູ່ໃນອິນເດັຽໄປຈົນເຖິງເອທີໂອເປັຽທັງຫມົດຈຳນວນ 127 ແຂວງ, ເຖິງທຸກແຂວງໃນພາສາຂຽນຂອງເຂົາ,
ແລະ ເຖິງທຸກຄົນໃນພາສາຂອງເຂົາ ແລະເຖິງຄົນຢິວທຸກຄົນ ຂຽນໃນພາສາຂອງເຂົາ.
[10]ມໍເດໄກໄດ້ຂຽນໃນນາມຂອງກະສັດອາຫາສຸເອຣັດ ແລະ ໄດ້ປຣະທັບຕຣາດ້ວຍຕຣາປຣະທັບຂອງກະສັດ.
ເຂົາໄດ້ສົ່ງສານອອກໄປໂດຍຜູ້ສົ່ງສານມ້າໄວ ຊຶ່ງໃຊ້ສຳລັບຣາຊະການຂອງກະສັດ ເປັນມ້າທີ່ໄວທີ່ສຸດຈາກຄອກມ້າ.
[11]ກະສັດໄດ້ຊົງມີຄຳສັ່ງອານຸຍາດ ໃຫ້ຄົນຢິວໃນທຸກແຂວງຮວມຕົວກັນເພື່ອຕຽມພ້ອມປົກປ້ອງຊີວິດຂອງພວກເຂົາຄືໃຫ້ທຳລາຍ ໃຫ້ຂ້າ
ແລະໃຫ້ສັງຫານກອງທັບໃດກໍຕາມຫລືໃຜກໍຕາມ, ໃນແຂວງໃດກໍຕາມທີ່ອາດຈະໂຈມຕີພວກເຂົາ ລວມທັງເດັກແລະຜູ້ຍິງ, ແລະ
ໂຈນທີ່ຈະມາປຸ້ນເອົາຊັບສົມບັດຂອງພວກເຂົາ.[12]ນີ້ຈະຕ້ອງມີຂໍ້ບັງຄັບໃຊ້ໃນທຸກແຂວງຂອງກະສັດອາຫາສຸເອຣັດ,
ຄືວັນທີສິບສາມຂອງເດືອນສິບສອງ ຄືເດືອນອາດານ.
[13]ສຳເນົາຂອງຄຳສັ່ງການນັ້ນໄດ້ອອກເປັນກົດຫມາຍ ແລະ ສົ່ງເປັນອອກແຈ້ງການເຖິງຜູ້ຄົນທັງຫມົດ.
ພວກຢິວຈະຕ້ອງພ້ອມໃນວັນນັ້ນເພື່ອລ້າງແຄ້ນແກ່ສັດຕຣູຂອງພວກເຂົາ.[14]ແລ້ວຜູ້ສົ່ງສານກໍໄດ້ຮີບໄປ ຜູ້ປົກຄອງເມືອງຂອງກະສັດ.
ພວກເຂົາໄດ້ອອກໄປໂດຍປາສະຈາກຄວາມຊັກຊ້າ. ຄຳສັ່ງຂອງກະສັດໄດ້ອອກຈາກຣາຊະວັງໃນຊູຊາ.
[15]ຕໍ່ຫນ້າຂອງກະສັດ ມໍເດໄກໄດ້ສວມໃສ່ເສື້ອຂອງກະສັດເປັນເສື້ອສີຟ້າ ແລະສີຂາວ, ແລະໄດ້ສວມມົງກຸດທອງຄຳ
ແລະເສື້ອຄຸມຜ້າປ່ານສີມ່ວງ, ແລ້ວຄົນໃນເມືອງຊູຊາຕ່າງກໍໄດ້ພາກັນໂຮ່ຮ້ອງຍິນດີ.[16]ພວກຢິວກໍເກີດຄວາມເບີກບານ ແລະ ຊື່ນຊົມຍິນດີ ແລະ
ເປັນກຽດຕິຍົດ.[17]ໃນທຸກແຂວງ ແລະ ເມືອງຕ່າງໆ, ແລະ ຜູ້ປົກຄອງເມືອງໄປເຖິງ, ກໍໄດ້ເກີດຄວາມຊື່ນບານ ແລະ ຍິນດີທ່າມກາງພວກຄົນຢິວ,
ມີການລ້ຽງສະຫລອງ ແລະວັນຢຸດພັກມີຄົນຢ່າງຫລວງຫລາຍຈາກແຜ່ນດິນຕ່າງໆ ໄດ້ກາຍເປັນຄົນຢິວ,
ເພາະວ່າຄວາມຢ້ານຂອງຄົນຢິວໄດ້ຕົກຢູ່ເຫນືອພວກເຂົາ.


generated on Tue Jun 17 19:01:42 2025

9 [1]ບັດນີ້ໃນເດືອນທີສິບສອງ, ຄືເດືອນອາດານ, ໃນວັນທີສິບສາມ, ເມື່ອກົດຫມາຍຂອງກະສັດ ແລະ ຄຳສັ່ງກຳລັງຈະຖືກສົ່ງອອກໄປນັ້ນ,
ໃນວັນທີ່ສັດຕຣູຂອງພວກຢິວໄດ້ຫວັງວ່າຈະມີອຳນາດເຫນືອພວກເຂົາ,
ແຕ່ກັບກາຍເປັນພວກຢິວທີ່ໄດ້ມີອຳນາດເຫນືອຄົນເຫລົ່ານັ້ນທີ່ກຽດຊັງພວກເຂົາ.[2]ພວກຢິວກໍໄດ້ມາລວມຕົວກັນໃນເມືອງຕ່າງໆ
ຂອງພວກເຂົາຕະຫລອດຈົນທົ່ວທຸກແຂວງຂອງກະສັດອາຫາສຸເອຣັດ, ເພື່ອຂ້າຄົນເຫລົ່ານັ້ນທີ່ພະຍາຍາມນຳຄວາມຫາຍະນະມາໃຫ້ພວກເຂົາ.
ບໍ່ມີໃຜຢືນຢັດຕໍ່ສູ້ພວກເຂົາໄດ້, ເພາະຄວາມຢ້ານທີ່ມີຕໍ່ພວກຢິວໄດ້ຕົກຢູ່ນຳຄົນທັງປວງ.

[3]ບັນດາຂ້າຣາຊະການໃນແຂວງຕ່າງໆ, ພວກຜູ້ປົກຄອງແຂວງ, ພວກຂ້າຣາຊະການ ແລະ ຄົນທີ່ປະຕິບັດຣາຊະການຂອງກະສັດ,
ໄດ້ຊ່ວຍພວກຢິວເພາະວ່າຄວາມຢ້ານຕໍ່ມໍເດໄກໄດ້ຕົກເຫນືອພວກເຂົາ.[4]ເພາະມໍເດໄກເປັນໃຫຍ່ໃນຣາຊະວັງຂອງກະສັດ, ແລະ
ຊື່ສຽງຂອງເຂົາກໍໄດ້ຊ່າລືໄປທົ່ວທຸກແຂວງ, ເພາະຊາຍມໍເດໄກຄົນນີ້ໄດ້ເປັນຜູ້ຍິ່ງໃຫຍ່.[5]ພວກຢິວໄດ້ໂຈມຕີສັດຕຣູຂອງພວກເຂົາ
ແລະເຮັດຕາມທີ່ພວກເຂົາໃຈມັກຕໍ່ຄົນເຫລົ່ານັ້ນທີ່ກຽດຊັງພວກເຂົາ.
[6]ທີ່ປ້ອມປາການໃນເມືອງຊູຊານັ້ນ ພວກຢິວໄດ້ຂ້າ ແລະ ໄດ້ທຳລາຍຫ້າຮ້ອຍຄົນ.[7]ພວກເຂົາໄດ້ຂ້າປາກຊານດາທາ, ດານໂຟນອາ,
ຊະປາທາ[8]ໂປຣາທາ, ອາດາລີອາ, ອາຣີດາທາ[9]ປາກມາຊະຕາ, ອາຣີໄສ, ອາຣີໄດ, ແລະ ໄວຊາທາ[10]ແລະລູກຊາຍທັງສິບຄົນຂອງຮາມານ,
ລູກຊາຍຮາມເມດາທາ, ສັດຕຣູຂອງພວກຢິວແຕ່ພວກເຂົາບໍ່ໄດ້ເອົາຊັບສົມບັດໃດໆເລີຍ.
[11]ໃນວັນນັ້ນ ຈຳນວນຄົນທີ່ຖືກຂ້າໃນປ້ອມປາການແຫ່ງເມືອງຊູຊາ, ກໍໄດ້ຖືກລາຍງານແກ່ກະສັດ.[12]ກະສັດກໍໄດ້ຊົງກ່າວກັບຣາຊີນີເອສະເທີວ່າ,
"ພວກຢິວໄດ້ຂ້າຄົນຫ້າຮ້ອຍຄົນໃນປ້ອມແຫ່ງເມືອງຊູຊາ, ລວມທັງລູກຊາຍສິບຄົນຂອງຮາມານ,
ພວກເຂົາໄດ້ເຮັດສິ່ງໃດອີກໃນແຂວງທີ່ເຫລືອຂອງກະສັດ? ບັດນີ້ຄຳປາຖນາຂອງເຈົ້າຄືຫຍັງ? ເຮົາຈະໃຫ້ແກ່ເຈົ້າ. ຄຳຮ້ອງຂໍຂອງເຈົ້າຄືຫຍັງ?
ເຮົາຈະໃຫ້ແກ່ເຈົ້າ."
[13]ແລ້ວເອສະເທີກໍໄດ້ຊົງທູນວ່າ, "ຫາກສິ່ງນີ້ເປັນທີ່ພໍພຣະທັຍພຣະອົງ
ໃຫ້ພວກຢິວໃນຊູຊາໄດ້ຮັບອະນຸຍາດໃຫ້ປະຕິບັດຕາມຜູ້ປົກຄອງແຂວງໃນວັນນີ້ ແລະມື້ອື່ນດ້ວຍ, ແລະ
ເອົາສິບລູກຊາຍທັງສິບຄົນຂອງຮາມານໄປແຂວນທີ່ບ່ອນແຂວນຄໍ."[14]ດັ່ງນັ້ນກະສັດກໍໄດ້ມີຮັບສັ່ງ ແລະ ສິ່ງນີ້ກໍໄດ້ເຮັດແລ້ວ.
ຄຳສັ່ງນັ້ນໄດ້ແຈ້ງອອກໄປໃນຊູຊາ ແລະ ພວກເຂົາກໍແຂວນສິບລູກຊາຍສິບຄົນຂອງຮາມານເສຍ.
[15]ພວກຢິວທີ່ໄດ້ຢູ່ໃນເມືອງຊູຊາກໍມາຮ່ວມຕົວກັນໃນວັນທີສິບສີ່ໃນເດືອນອາດານ, ແລະ ໄດ້ຂ້າຊາຍໃນເມືອງຊູຊາອີກສາມຮ້ອຍຄົນ,
ແຕ່ພວກເຂົາບໍ່ໄດ້ຍຶດເອົາສົມບັດໃດໆເລີຍ.[16]ສ່ວນພວກຢິວທີ່ເຫລືອຢູ່ໃນແຂວງຂອງກະສັດກໍມາລວມຕົວກັນເພື່ອປົກປ້ອງຊີວິດຂອງພວກເຂົາ,
ແລະ ພວກເຂົາກໍຮູ້ສຶກໂລ່ງໃຈຈາກສັດຕຣູ ຂອງພວກເຂົາ ແລະໄດ້ຂ້າຄົນເຫລົ່ານັ້ນທີ່ກຽດຊັງພວກເຂົາກວ່າເຈັດຫມື່ນຫ້າພັນຄົນ,
ແຕ່ພວກເຂົາບໍ່ໄດ້ເອົາຂອງມີຄ່າໃດໆ ຂອງຄົນເຫລົ່ານັ້ນທີ່ພວກເຂົາໄດ້ຂ້າເລີຍ.
[17]ເຫດການເຫລົ່ານີ້ເກີດຂຶ້ນໃນວັນທີສິບສາມ ຄືເດືອນອາດານ. ໃນວັນທີສິບສີ່ພວກເຂົາກໍພັກ ແລະມີການລ້ຽງ ແລະຍິນດີໃນວັນນັ້ນ.
[18]ແຕ່ພວກຢິວທີ່ຢູ່ໃນເມືອງຊູຊາໄດ້ມາລວມຕົວກັນໃນວັນທີສິບສາມ ແລະວັນທີສິບສີ່ ພວກເຂົາຈຶ່ງພັກໃນວັນທີສິບຫ້າ
ແລະໃຫ້ວັນນັ້ນເປັນວັນແຫ່ງການລ້ຽງສະຫລອງ ແລະຍິນດີ.[19]ເຫດນີ້ເອງພວກຢິວໃນຊົນນະບົດທີ່ອາສັຍຢູ່ແຖບຮອບນອກ
ໄດ້ໃຫ້ວັນທີສິບສີ່ໃນເດືອນອາດານເປັນວັນລ້ຽງສະຫລອງ ແລະ ຍິນດີຂອງພວກເຂົາແລະ ໃຫ້ເປັນວັນ
ທີ່ພວກເຂົາຈະສົ່ງຂອງຂວັນເປັນອາຫານໃຫ້ແກ່ກັນແລະກັນ.
[20]ແລ້ວມໍເດໄກກໍໄດ້ບັນທຶກສິ່ງຕ່າງໆເຫລົ່ານີ້ ແລະ ໄດ້ສົ່ງຈົດຫມາຍໄປຍັງພວກຢິວທັງປວງທີ່ຢູ່ໃນແຂວງທັງຫມົດຂອງກະສັດອາຫາສຸເອຣັດ,
ທັງໃກ້ ແລະໄກ,[21]ບັງຄັບໃຫ້ພວກເຂົາຮັກສາວັນທີສິບສີ່ ແລະ ວັນທີສິບຫ້າໃນເດືອນອາດານຂອງທຸກໆປີ.
[22]ວັນເຫລົ່ານີ້ຄືວັນທີ່ພວກຢິວໄດ້ພົ້ນຈາກສັດຕູຂອງພວກເຂົາ ແລະເປັນວັນທີ່ຄວາມໂສກເສົ້າຂອງພວກເຂົາໄດ້ປ່ຽນເປັນຄວາມຊື່ນຊົມຍິນດີ
ແລະປ່ຽນການຄໍ່າຄວນເປັນວັນແຫ່ງການສະເຫລີມສະຫລອງ. ພວກເຂົາຕ້ອງຈັດການສະເຫລີມສະຫລອງ ແລະ
ຍິນດີແລະສົ່ງຂອງຂວັນຊຶ່ງເປັນອາຫານໃຫ້ແກ່ກັນແລະກັນແລະ ໃຫ້ຂອງຂວັນແກ່ຄົນຍາກຈົນ.
[23]ດັ່ງນັ້ນພວກຢິວຈຶ່ງໄດ້ເຮັດການສະຫລອງຕໍ່ຈາກທີ່ໄດ້ເລີ່ມໄປແລ້ວ, ເພື່ອປະຕິບັດຕາມທີ່ມໍເດໄກໄດ້ຂຽນໄວ້ແກ່ພວກເຂົາ.[24]ໃນເວລານັ້ນ
ຮາມານລູກຊາຍ ສັດຕູຂອງພວກຢິວ, ໄດ້ວາງອຸບາຍຕໍ່ຕ້ານພວກຢິວຫວັງທຳລາຍພວກເຂົາ ແລະ ເຂົາໄດ້ຈັບສະຫລາກ
ເພື່ອຫາວັນທຳລາຍລ້າງຜານພວກເຂົາ, ເພື່ອບົດເຂົາໃຫ້ຫມຸ່ນ ແລະ ທຳລາຍພວກເຂົາ.[25]ແຕ່ເມື່ອກະສັດໄດ້ຮູ້ເລື່ອງນີ້
ພຣະອົງກໍໄດ້ມີຮັບສັ່ງໂດຍການສົ່ງສານອອກໄປເພື່ອປ່ຽນແຜນການອັນຊົ່ວຮ້າຍຂອງຮາມານທີ່ຕໍ່ຕ້ານພວກຢິວ, ໃຫ້ກັບມາຕົກລົງເຫນືອຫົວ,
ແລະ ທີ່ເຂົາ ແລະ ລູກບັນດາລູກຊາຍຂອງເຂົາຕ້ອງຖືກແຂວນທີ່ບ່ອນແຂວນຄໍ.
[26]ດັ່ງນັ້ນພວກເຂົາຈຶ່ງຮ້ອງວັນນັ້ນວ່າ ປູຣິມ, ຕາມຊື່ຂອງການຈົກສະຫລາກ. ເພາະວ່າທຸກສິ່ງໄດ້ຂຽນເອົາໄວ້ໃນຈົດຫມາຍ, ແລະ
ທຸກສິ່ງທີ່ໄດ້ເຫັນ ແລະທຸກສິ່ງທີ່ໄດ້ເກີດຂຶ້ນແກ່ພວກເຂົາ,[27]ພວກຢິວໄດ້ຍອມຮັບເອົາທຳນຽມໃຫມ່ແລະ ຫນ້າທີ່ຂອງພວກເຂົາ.
ທຳນຽມນີ້ມີໄວ້ສຳລັບພວກເຂົາເອງ, ຕະຫລອດຈົນລູກຫລານຂອງພວກເຂົາ ແລະທຸກຄົນທີ່ຮ່ວມກັບພວກເຂົາ.
ເພື່ອໃຫ້ພວກເຂົາໄດ້ສະເຫລີມສະຫລອງໃນສອງວັນນີ້ຂອງທຸກໆປີ. ທີ່ພວກເຂົາຈະສະເຫລີມສະຫລອງໃນແບບທີ່ພວກເຂົາທຳ
ແລະໃນຊ່ວງເວລາດຽວກັນນັ້ນຂອງທຸກໆປີ.[28]ໃຫ້ວັນເຫລົ່ານີ້ເປັນວັນສະເຫລີມສະຫລອງ ແລະໃຫ້ຖືປະຕິບັດກັນໃນທຸກຊົ່ວອາຍຸຄົນ,
ທຸກຄອບຄົວ, ທຸກແຂວງແລະທຸກເມືອງ. ໃຫ້ພວກຢິວ ແລະລູກຫລານຂອງພວກເຂົາທີ່ຈະບໍ່ຢຸດ ແລະຖືປະຕິບັດວັນປູຣິມ ນີ້ຢ່າງສັດຊື່
ເພື່ອບໍ່ໃຫ້ພວກເຂົາລືມວັນເຫລົ່ານີ້.
[29]ພຣະຣາຊີນີເອສະເທີລູກຍິງຂອງອາບີໄຮ ແລະມໍເດໄກຄົນຢິວໄດ້ຂຽນ
ຈົດຫມາຍສະບັບທີສອງນີ້ດ້ວຍອຳນາດຢ່າງເຕັມທີ່ເພື່ອຢືນຢັນເລື່ອງຂອງເທສະການປູຣິມ.
[30]ຈົດຫມາຍເຫລົ່ານັ້ນກໍໄດ້ຖືກສົ່ງໄປເຖິງພວກຢິວໃນແຂວງທັງ 127 ແຫ່ງທົ່ວອານາຈັກຂອງກະສັດອາຫາສຸເອຣັດ,
ອວຍພອນໃຫ້ພວກຢິວປອດພັຍ ແລະຢູ່ເຢັນເປັນສຸກ.[31]ຈົດຫມາຍເຫລົ່ານີ້ຢືນຢັນໃຫ້ຖືຮັກສາວັນຕ່າງໆ ຂອງປູຣິມຕາມເວລາທີ່ໄດ້ກຳນົດໄວ້,
ຕາມທີ່ມໍເດໄກຊາວຢິວ ແລະພຣະຣາຊີນີເອສະເທີໄດ້ໃຫ້ຊາວຢິວຖືປະຕິບັດ. ພວກຢິວກໍຍອມຮັບ ແລະຖືປະຕິບັດສຳລັບພວກເຂົາ


generated on Tue Jun 17 19:01:42 2025

ແລະລູກຫລານຂອງພວກເຂົາ ເຫມືອນເຊັ່ນດຽວກັບທີ່ພວກເຂົາໄດ້ຍອມຮັບການອົດອາຫານ ແລະ ການຄ້ຳຄວນ.
32 ຄຳສັ່ງຂອງນາງເອສະເທີ ໄດ້ຢືນຢັນຂໍ້ບັງຄັບເຫລົ່ານີ້ເຖິງເລື່ອງຂອງເທສະການປູຣິມ ແລະໄດ້ມີບັນທຶກໄວ້ໃນຫນັງສື.

 generated on Tue Jun 17 19:01:42 2025

10 [1]ແລ້ວກະສັດອາຫາສຸເອຣັດກໍໄດ້ມີຄໍາສັ່ງໃຫ້ຈັດເກັບພາສີທົ່ວທັງແຜ່ນດິນ ແລະຕາມຊາຍຝັ່ງທະເລ.[2]ຄວາມສໍາເລັດທັງຫມົດແຫ່ງອໍານາດ
ແລະ ອານຸພາບຂອງພຣະອົງພ້ອມດ້ວຍຄວາມຍິ່ງໃຫຍ່ຂອງມໍເດໄກ ທີ່ກະສັດໄດ້ຊົງຍົກເຂົາຂຶ້ນ, ສິ່ງເຫລົ່ານີ້ໄດ້ມີບັນທຶກໄວ້ໃນຫນັງສື
ປະຫວັດສາດຂອງກະສັດແຫ່ງມີເດັຽ ແລະເປີເຊັຽ.

[3]ມໍເດໄກຄົນຢິວມີຕໍາແຫນ່ງຮອງເປັນອັນດັບສອງຖັດຈາກກະສັດອາຫາສຸເອຣັດ. ທ່ານເປັນຜູ້ຍິ່ງໃຫຍ່ທ່າມກາງພວກຢິວ
ແລະເປັນທີ່ຊື່ນຊອບຂອງພີ່ນ້ອງຊາວຢິວທັງຫລາຍ. ເພາະທ່ານໄດ້ສະແຫວງຫາ ສະຫວັດດີພາບແກ່ຄົນຂອງທ່ານແລະ
ທ່ານໄດ້ເວົ້າໃຫ້ເກີດສັນຕິສຸກແກ່ຊົນຊາດຂອງທ່ານທັງຫມົດ.

# ພຣະຄັມ ໂຢບ

## 1

[1]ມີຊາຍຄົນຫນຶ່ງອາໄສຢູ່ໃນດິນແດນອູເຊ ຊື່ຂອງເຂົາຄືໂຢບ; ໂຢບເປັນຄົນສັດຊື່ ແລະ ເປັນຄົນດີ. ເຂົາເປັນຄົນຂາບໄຫວ້ພຣະເຈົ້າ,
ແລະບໍ່ເຄີຍເຮັດຊົ່ວ.[2]ໂຢບມີລູກຊາຍເຈັດຄົນ ແລະລູກສາວສາມຄົນ.[3]ເຂົາມີຝູງແກະເຈັດພັນໂຕ, ອູດສາມພັນໂຕ, ງົວກຽນຫ້າຮ້ອຍຄູ່, ແລະຝູງ
ລໍຫ້າຮ້ອຍໂຕ ແລະເຂົາມີທາດຮັບໃຊ້ຈໍານວນຫລວງຫລາຍ. ເຂົາເປັນຜູ້ຊາຍທີ່ຍິ່ງໃຫຍ່ທີ່ສຸດໃນທ່າມກາງບັນດາຊາວຕາເວັນອອກ.

[4]ໃນວັນກໍານົດຂອງລູກຊາຍຂອງລາວແຕ່ລະຄົນ, ລາວຈະຈັດງານລ້ຽງໃນເຮືອນຂອງລາວ. ພວກເຂົາໄດ້ເຊີນ
ແລະເອີ້ນນ້ອງສາຍທັງສາມຂອງພວກເຂົາມາເພື່ອກິນ ແລະ ດື່ມຮ່ວມກັນກັບພວກເຂົາ.[5]ເມື່ອມື້ຈັດງານລ້ຽງເຫລົ່ານັ້ນຜ່ານໄປ,
ໂຢບໄດ້ເອີ້ນພວກເຂົາມາ ແລະ ຊໍາລະພວກເຂົາໃຫ້ບໍຣິສຸດ. ໂຢບຕື່ນແຕ່ເຊົ້າ ແລະ ຖວາຍເຄື່ອງເຜົາບູຊາ ເພື່ອໃຫ້ລູກຂອງເຂົາແຕ່ລະຄົນ,
ເພາະເຂົາເວົ້າວ່າ, "ພວກລູກຂອງຂ້ານ້ອຍອາດຈະເຮັດບາບ ແລະການປະຫມາດພຣະເຈົ້າຢູ່ໃນໃຈ." ໂຢບໄດ້ກ່າວສິ່ງນີ້ສະເຫມີ.
[6]ແລ້ວມາເຖິງວັນຫນຶ່ງ ເມື່ອບັນດາລູກຊາຍຂອງພຣະເຈົ້າໄດ້ມາປາກົດຕົວຂອງພວກເຂົາຕໍ່ຫນ້າພຣະຢາເວ.
ຊາຕານກໍໄດ້ເຂົ້າມາພ້ອມກັບພວກເຂົາດ້ວຍ.[7]ພຣະຢາເວໄດ້ຊົງກ່າວແກ່ຊາຕານວ່າ,“ເຈົ້າມາແຕ່ໃສ?" ແລ້ວຊາຕານໄດ້ທູນຕອບພຣະຢາເວວ່າ,
“ພະເນຈອນໄປເທິງແຜ່ນດິນໂລກ, ໄປໆແລະມາໆ ເທິງແຜ່ນດິນ.”[8]ພຣະຢາເວໄດ້ຊົງກ່າວວ່າ, "ເຈົ້າໄດ້ເຫັນໂຢບຜູ້ຮັບໃຊ້ຂອງເຮົາບໍ? ເພາະບໍ່ມີ
ໃຜເທິງແຜ່ນໂລກທີ່ເປັນເຫມືອນລາວ, ລາວເປັນຄົນບໍ່ມີຄວາມຜິດ ແລະລາວເປັນຄົນສັດຊື່, ລາວເປັນຄົນຂາບໄຫວ້ພຣະເຈົ້າ ແລະ
ບໍ່ເຄີຍເຮັດຊົ່ວ.”
[9]ແລ້ວຊາຕານໄດ້ທູນຕອບພຣະຢາເວວ່າ, “ໂຢບຂາບໄຫວ້ພຣະອົງໂດຍປາສະຈາກເຫດຜົນຢ່າງອື່ນບໍ?[10]ບໍ່ແມ່ນພຣະອົງ
ຊົງກັ້ນອະນາເຂດລ້ອມຮອບລາວ, ເຮືອນຂອງລາວ, ແລະລ້ອມຮອບທຸກດ້ານຢ່າງນັ້ນບໍ? ພຣະອົງໄດ້ຊົງອວຍພອນວຽກງານທຸກຢ່າງຂອງລາວ.
ຝູງສັດຂອງລາວໃຫ້ມີຄວາມຈະເລີນຂຶ້ນໃນດິນແດນນັ້ນ.[11]”ແຕ່ບັດນີ້ ຂໍພຣະອົງຊົງຢືນພຣະຫັດຂອງພຣະອົງ ແລະ ແຕະຕ້ອງທຸກສິ່ງ
ທຸກຢ່າງເຂົາມີໄປ ແລະ ເບິ່ງວ່າເຂົາຈະບໍ່ປ້ອຍດ່າພຣະອົງຕໍ່ຫນ້າຂອງພຣະອົງ.”[12]ພຣະຢາເວຊົງແກ່ຊາຕານວ່າ, “ເບິ່ງແມ, ທຸກສິ່ງທຸກຢ່າງທີ່ໂຢບ
ມີກໍຢູ່ໃນມືຂອງເຈົ້ານັ້ນ." ຂໍພຽງແຕ່ຕໍ່ລາວເອງ, ຢ່າຍື່ນມືຂອງເຈົ້າແຕະຕ້ອງລາວ.” ແລ້ວຊາຕານຈຶ່ງໄດ້ຈາກໄປຕໍ່ຫນ້າຂອງພຣະຢາເວ.
[13]ແລ້ວມາເຖິງມື້ຫນຶ່ງ ຂະນະທີ່ບັນດາລູກຊາຍ ແລະລູກສາວຂອງໂຢບ ກໍາລັງກິນ ແລະດື່ມເຫລົ້າອະງຸ່ນຢູ່ໃນເຮືອນຂອງອ້າຍກົກຂອງພວກເຂົາ.
[14]ມີຜູ້ສື່ງຂ່າວຄົນຫນຶ່ງແລ່ນມາຫາໂຢບ ແລະເວົ້າວ່າ, "ຝູງງົວທັງຫລາຍກໍາລັງໄຖນາ ແລະ ຝູງລໍກໍາລັ້ງກິນຫຍ້າຢູ່ຂ້າງໆ.[15]ພວກເຊບາ
ໄດ້ເຂົ້າໂຈມຕີ ແລະ ປຸ້ນເອົາງົວກັບລໍທັງຫມົດໄປ. ຄົນເຊບາໄດ້ຂ້າຄົນຮັບໃຊ້ທັງຫມົດດ້ວຍດາບ. ມີຂ້ານ້ອຍຄົນດຽວ ທີ່ລອດຊີວິດຫນີມາບອກ
ທ່ານໄດ້.”
[16]ໃນຂະນະທີ່ລາວກໍາລັງເວົ້າຢູ່ນັ້ນ, ກໍມີອີກຄົນຫນຶ່ງໄດ້ເຈົ້າມາ ແລະ ເວົ້າວ່າ, “ໄຟຂອງພຣະເຈົ້າລົງມາຈາກທ້ອງຟ້າ ແລະ ໄດ້ເຜົາໄຫມ້ຝູງແກະ
ແລະ ບັນດາທາດທັງຫມົດ. ຍັງຂ້ານ້ອຍພຽງຄົນດຽວທີ່ລອດຊີວິດຫນີມາບອກທ່ານ.”[17]ໃນຂະນະທີ່ເຂົາກໍາລັງເວົ້າຢູ່ນັ້ນ,
ກໍມີອີກຄົນຫນຶ່ງໄດ້ເຂົ້າມາ ແລະ ເວົ້າວ່າ, “ມີຄົນຄັນເດອາໄດ້ຕັ້ງເປັນສາມກຸ່ມ ໄດ້ເອົາໂຈມຕີຝູງອູດ ແລະ ໄດ້ເອົາພວກມັນໄປ
ສໍາລັບພວກທາດທັງຫລາຍ ຄົນຄັນເດອາໄດ້ຂ້າພວກເຂົາດ້ວຍຄົມດາບ. ຍັງຂ້ານ້ອຍພຽງຄົນດຽວທີ່ລອດຊີວິດຫນີມາບອກທ່ານ.”
[18]ໃນຂະນະທີ່ລາວກໍາລັງເວົ້າຢູ່ນັ້ນ, ກໍມີອີກຄົນຫນຶ່ງໄດ້ຟ້າວເຂົ້າມາ ແລະເວົ້າວ່າ, “ບັນດາລູກຊາຍ ແລະ ລູກສາວທີ່ກໍາລັງກິນ
ແລະດື່ມເຫລົ້າອະງຸ່ນຢູ່ເຮືອນຂອງອ້າຍກົກຂອງພວກເຂົານັ້ນ.[19]ໄດ້ມີລົມແຮງໄດ້ພັດມາຈາກຖິ່ນທຸລະກັນດານ ແລະ ໄດ້ພັດປະທະເຮືອນ
ຊານນັ້ນທັງສີ່ດ້ານ, ຈົນເຮືອນພັງລົ້ມທັບຄົນຫນຸ່ມສາວທັງຫລາຍແລະ ພວກເຂົາຕາຍ. ຍັງຂ້ານ້ອຍພຽງຄົນດຽວທີ່ລອດຊີວິດຫນີມາບອກທ່ານ.”
[20]ແລ້ວໂຢບຈຶ່ງໄດ້ລຸກຂຶ້ນ, ຈີກເສື້ອຄຸມຂອງເຂົາ, ແຖຜົມຂອງເຂົາ, ກົ້ມຫນ້າລົງດິນ ແລະນະມັດສະການພຣະເຈົ້າ.[21]“ຂ້ານ້ອຍເປັນຄົນຕົວເປົ່າ
ເມື່ອຂ້ານ້ອຍອອກມາຈາກທ້ອງແມ່ຂອງຂ້ານ້ອຍ, ແລະຂ້ານ້ອຍຈະເປັນຄົນຕົວເປົ່າຈະກັບທີ່ນັ້ນ. ຄືພຣະຢາເວຜູ້ຊົງໂຜດປຣະທານ, ແລະ
ຄືພຣະຢາເວ ຜູ້ກໍຊົງເອົາຄືນໄປ. ຂໍສາທຸການພຣະນາມຂອງພຣະຢາເວ.”[22]ໃນເຫດທັງຫມົດເຫລົ່ານີ້, ໂຢບກໍບໍ່ໄດ້ເຮັດບາບ, ຫລືບໍ່ໄດ້ກ່າວໂທດ
ພຣະເຈົ້າວ່າຊົງກະທໍາຜິດເລີຍ.

2 1ແລ້ວກໍເຖິງວັນທີບັນດາລູກຊາຍຂອງພຣະເຈົ້າໄດ້ມາປະກົດຕໍ່ຫນ້າຂອງພຣະຢາເວ. ຊາຕານກໍມານໍາພ້ອມກັບພວກເຂົາຕໍ່ຫນ້າຂອງ
ພຣະຢາເວດ້ວຍ. 2ພຣະຢາເວຊົງເວົ້າກັບຊາຕານວ່າ, “ເຈົ້າມາແຕ່ໃສ?” ຊາຕານຈຶ່ງໄດ້ທູນຕອບພຣະຢາເວ ແລະ ເວົ້າວ່າ,
“ພະເນຈອນໄປເທິງແຜ່ນດິນໂລກ, ຈາກໄປໆ ມາໆ ເທິງແຜ່ນດິນໂລກ.”

3ພຣະຜູ້ຢາເວຊົງກ່າວແກ່ມານຊາຕານວ່າ, “ເຈົ້າໄດ້ເຫັນໂຢບ ຜູ້ຮັບໃຊ້ຂອງເຮົາຫລືບໍ? ໃນໂລກນີ້ ບໍ່ມີໃຜເຫມືອນກັນກັບລາວ, ລາວເປັນຄົນ
ສັດຊື່ ແລະລາວເປັນຄົນດີ, ຜູ້ທີ່ຂາບໄຫວ້ພຣະເຈົ້າ ແລະ ບໍ່ເຄີຍເຮັດຊົ່ວ. ລາວຍັງຍຶດຫມັ້ນຕໍ່ຄວາມສັດຊື່ຂອງລາວ, ເຖິງແມ່ນວ່າ
ເຈົ້າຊັກຊວນເຮົາໃຫ້ຕໍ່ສູ້ກັບລາວ, ເພື່ອທໍາລາຍລາວໂດຍບໍ່ມີເຫດຜົນ.”
4ມານຊາຕານໄດ້ທູນຕອບພຣະຢາເວ ແລະເວົ້າວ່າ, “ຫນັງແທນຫນັງ, ໂດຍແທ້, ຄົນຫນຶ່ງຄົນຈະສະຫລະທຸກສິ່ງທີ່ລາວມີເພື່ອທົດແທນຊີວິດ
ຂອງລາວ. 5ແຕ່ບັດນີ້ ຂໍຊົງຢຽດພຣະຫັດຂອງພຣະອົງ ແລະ ແຕະຕ້ອງກະດູກ ແລະ ຊີ້ນຂອງລາວ, ແລະເບິ່ງວ່າລາວຈະປ້ອຍດ່າພຣະອົງຕໍ່ຫນ້າ
ພຣະອົງຫລືບໍ.” 6ດັ່ງນັ້ນ ພຣະຢາເວຈຶ່ງຊົງກ່າວຕໍ່ພະຍາມານວ່າ, “ເບິ່ງແມ, ຢູ່ໃຕ້ອໍານາດຂອງເຈົ້າ; ມີພຽງຊີວິດຂອງລາວເທົ່ານັ້ນ ເຈົ້າຢ່າ
ຂ້າລາວ.”
7ແລ້ວມານຊາຕານໄດ້ຫນີອອກຈາກພຣະພັກຂອງພຣະຢາເວ. ມັນໄດ້ເຮັດໃຫ້ໂຢບເປັນຝີຮ້າຍຕັ້ງແຕ່ຕີນໄປຈົນເຖິງຫົວຂອງລາວ. 8ໂຢບ ຈຶ່ງໄດ້
ເອົາຫມໍ້ທີ່ແຕກເປັນປ່ຽງມາຂູດຕາມຕົວຂອງລາວ, ແລະ ເຂົາໄດ້ນັ່ງຢູ່ທ່າມກາງກອງຂີ້ເຖົ່າ.
9ແລ້ວເມຍຂອງລາວ ໄດ້ເວົ້າກັບລາວວ່າ, “ເຈົ້າຈະຍັງຈະຍຶດຫມັ້ນໃນຄວາມສັດຊື່ຂອງເຈົ້າຢູ່ບໍ? ຂໍໃຫ້ປ້ອຍດ່າພຣະເຈົ້າ ແລະຕາຍ
ເສຍ.” 10ແຕ່ໂຢບໄດ້ຕອບນາງວ່າ, “ເຈົ້າເວົ້າເຫມືອນຍິງໂງ່ຈ້າເວົ້າ. ເມື່ອພວກເຮົາໄດ້ຮັບສິ່ງທີ່ດີຈາກພຣະເຈົ້າປະທານ ແລະ
ພວກເຮົາບໍ່ສົມຄວນໄດ້ຮັບສິ່ງທີ່ບໍ່ດີບາງເທື່ອບໍ?” ໃນເຫດການທັງຫມົດເຫລົ່ານີ້, ໂຢບກໍບໍ່ໄດ້ເວົ້າສິ່ງໃດປະຫມາດພຣະເຈົ້າເລີຍ.
11ເມື່ອມິດສະຫາຍສາມຄົນຂອງໂຢບໄດ້ຍິນຂ່າວວ່າບໍ່ດີທັງຫມົດທີ່ເກີດຂຶ້ນກັບໂຢບ. ພວກເຂົາແຕ່ລະຄົນຈຶ່ງໄດ້ມາຈາກສະຖານທີ່ຂອງພວກເຂົາ
ຄືເອລີຟັດ ຊາວເມືອງເຕມານ ບິນດັດ ຊາວເມືອງຊູອາ ແລະ ໂຊຟາ ຊາວເມືອງນາອາມາ. ພວກເຂົາ ກໍນັດກັນມາຢ້ຽມຢາມລາວ ແລະ ເພື່ອເລົ້າ
ໂລມຈິດໃຈລາວ.
12ເມື່ອພວກເຂົາເບິ່ງຈາກບ່ອນໄກ, ພວກເຂົາຈື່ລາວບໍ່ໄດ້. ພວກເຂົາຈຶ່ງຮ້ອງສຽງດັງ ແລະ ຮ້ອງໄຫ້; ພວກເຂົາແຕ່ລະຄົນຈີກເສື້ອຜ້າຂອງຕົນ
ແລະ ຫວ່ານຂີ້ຝຸ່ນດິນເທິງອາກາດ ແລະເຫນືອຫົວຂອງພວກເຂົາ. 13ແລ້ວພວກເຂົາຈຶ່ງນັ່ງຢູ່ເທິງພື້ນດິນຮ່ວມກັບໂຢບເປັນເວລາເຈັດມື້ເຈັດຄືນ.
ໂດຍບໍ່ເວົ້າຫຍັງເລີຍກັບລາວ, ເພາະພວກເຂົາເຫັນໄດ້ເຫັນວ່າຄວາມໂສກເສົ້າຂອງລາວກໍຮຸນແຮງຢ່າງຫລວງຫລາຍ.

 generated on Tue Jun 17 19:01:42 2025

3 1ຫລັງຈາກນີ້, ໂຢບກໍເປີດປາກຂອງລາວ ແລະ ປ້ອຍດ່າວັນທີ່ລາວເກີດມາ.2ລາວເວົ້າວ່າ,3"ຂໍໃຫ້ວັນນັ້ນທີ່ຂ້ານ້ອຍໄດ້ເກີດມາ ຈົ່ງພິນາດ, ຄໍ່າ
ຄືນທີ່ໄດ້ກ່າວ, 'ເດັກຊາຍຄົນຫນຶ່ງໄດ້ເກີດມາ.'

4ຂໍໃຫ້ວັນນັ້ນຈົ່ງມືດມິດ; ຂໍໃຫ້ພຣະເຈົ້າຈາກເບື້ອງເທິງຢ່າລະນຶກເຖິງວັນນັ້ນອີກ, ຢ່າໃຫ້ແສງສະຫວ່າງສ່ອງໃນວັນນັ້ນ.5ຂໍໃຫ້ຄວາມມືດມິດ
ແລະ ເງົາແຫ່ງຄວາມຕາຍຮຽກຮ້ອງສິດທິເຫນືອມັນ. ຂໍໃຫ້ເມກປົກຄຸມເຫນືອມັນ; ຂໍໃຫ້ທຸກສິ່ງເຮັດໃຫ້ວັນນັ້ນມືດມິດ
ເປັນຄວາມຢ້ານກົວຢ່າງແທ້ຈິງ.
6ໃນຄໍ່າຄືນນັ້ນ, ຂໍໃຫ້ຄວາມມືດມິດເຂົ້າມາຢຶດຄອງມັນ. ຂໍໃຫ້ມັນບໍ່ມີຄວາມຊື່ນຊົມຍິນດີໃນທ່າມກາງບັນດາກາງເວັນຂອງປີນັ້ນ;
ຂໍໃຫ້ມັນບໍ່ໄດ້ເຂົ້າສູ່ການນັບຈໍານວນເດືອນທັງຫລາຍ.7ເບິ່ງແມ, ຂໍໃຫ້ຄືນນັ້ນ ເປັນຫມັນ; ປາສະຈາກຄວາມມ່ວນຊື່ນເຂົ້າມາພາຍໃນມັນ.
8ຂໍໃຫ້ພວກເຂົາສາບແຊ່ງວັນນັ້ນ, ຄົນເຫລົ່ານັ້ນທີ່ຮູ້ວິທີຄວບຄຸມເລວີໄດ້.9ຂໍໃຫ້ດວງດາວທັງຫລາຍຂອງແສງສະຫວ່າງໃນວັນນັ້ນມືດມິດ.
ຂໍໃຫ້ວັນນັ້ນເບິ່ງແສງອະລຸນ, ແຕ່ຫາບໍ່ພໍ ຫລື ບໍ່ເຫັນເປືອກຕາຂອງແສງອະລຸນ.10ເພາະມັນບໍ່ປິດປະຕູໃນທ້ອງຂອງແມ່ຂອງຂ້ານ້ອຍ, ແລະ ເພາະ
ມັນບໍ່ໄດ້ເຊື່ອງຄວາມລໍາບາກໃຫ້ພົ້ນສາຍຕາຂອງຂ້ານ້ອຍ.
11ເປັນຫຍັງຂ້ານ້ອຍຈຶ່ງບໍ່ຕາຍເສຍຕັ້ງແຕ່ຢູ່ໃນທ້ອງແມ່? ເປັນຫຍັງວິນຍານຂອງຂ້ານ້ອຍບໍ່ອອກຈາກຮ່າງກາຍ
ເມື່ອແມ່ຂອງຂ້ານ້ອຍໃຫ້ກໍາເນີດຂ້ານ້ອຍ?12ເປັນຫຍັງຫົວເຂົ່າຂອງແມ່ຂອງຂ້ານ້ອຍຈຶ່ງອູ້ມຂ້ານ້ອຍໄວ້? ເປັນຫຍັງຊວງເອິກຂອງແມ່ຂອງນ້ອຍ
ຈຶ່ງໃຫ້ຂ້ານ້ອຍໄດ້ກິນນົມ?
13ເພາະບັດນີ້ ຂ້ານ້ອຍກໍາລັງຈະໄດ້ນອນລົງຢ່າງສະຫງົບ. ຂ້ານ້ອຍຈະນອນຫລັບ ແລະພັກຜ່ອນ.14ພ້ອມກັບບັນດາກະສັດ ແລະຜູ້ໃຫ້ຄໍາປຶກສາ
ທັງຫລາຍໃນແຜ່ນດິນໂລກນີ້, ຜູ້ທີ່ສ້າງຂຸດຝັງສົບສໍາລັບພວກເຂົາເອງວ່າ ບັດນີ້ຢູ່ໃນການທໍາລາຍ.
15ຫລືຂ້ານ້ອຍກໍາລັງຈະນອນລົງພ້ອມກັບບັນດາເຈົ້າຊາຍທີ່ເຄີຍມີຄໍາ, ຢູ່ທີ່ເຮືອນທັງຫລາຍຂອງພວກເຂົາ ຖືກເຮັດໃຫ້ເຕັມໄປດ້ວຍເງິນ.16ຫລື
ວ່າຂ້ານ້ອຍຫນ້າຈະຕາຍຕອນເກີດມາ, ເປັນເຫມືອນເດັກນ້ອຍທີ່ບໍ່ມີວັນໄດ້ເຫັນແສງສະຫວ່າງ.
17ທີ່ນັ້ນຄົນຊົ່ວຮ້າຍຈາກຄວາມທຸກຍາກ; ທີ່ນັ້ນຄົນທີ່ອ່ອນລ້າໄດ້ຢຸດພັກຜ່ອນ.18ທີ່ນັ້ນຄົນທີ່ຖືກຄຸມຂັງໄດ້ສະຫງົບສຸກດ້ວຍກັນ; ພວກເຂົາບໍ່ໄດ້ຍິນ
ສຽງຮ້າຍຂອງຜູ້ກົດຂີ່ທາດ.19ທັງຜູ້ເລັກນ້ອຍ ແລະທັງຜູ້ໃຫ່ຍຢູ່ທີ່ນັ້ນ; ທາດກໍເປັນອິສະຫລະຈາກເຈົ້ານາຍຂອງພວກເຂົາ.
20ເປັນຫຍັງນໍຜູ້ທີ່ຢູ່ໃນຄວາມທຸກເວດທະນາຍັງໄດ້ຮັບແສງສະຫວ່າງ? ເປັນຫຍັງ ຈຶ່ງໃຫ້ຊີວິດແກ່ຄົນຫນຶ່ງທີ່ມີໃຈຂົມຂື່ນ,21ແກ່ຄົນຫນຶ່ງທີ່ລໍຄອຍ
ຄວາມຕາຍ ໂດຍທີ່ມັນຍັງບໍ່ມາ; ແກ່ຄົນຫນຶ່ງທີ່ຂຸດຫາຄວາມຕາຍຫລາຍກວ່າຂຸດຫາຊັບສົມບັດທີ່ເຊື່ອງໄວ້ຫລື?22ເປັນຫຍັງແສງສະຫວ່າງ
ຈຶ່ງສ່ອງມາໃຫ້ແກ່ຄົນຫນຶ່ງທີ່ຊື່ນຊົມຍິນດີຢ່າງຫລາຍ ແລະ ມີຄວາມສຸກ ເມື່ອເຂົາພົບອຸໂມງຝັງສົບ?
23ເປັນຫຍັງແສງສະຫວ່າງຈຶ່ງສ່ອງມາໃຫ້ແກ່ຊາຍຄົນຫນຶ່ງທີ່ວິຖີຖືກປິດຊ້ອນເອົາໄວ້, ຊາຍຄົນຫນຶ່ງທີ່ພຣະເຈົ້າຊົງໄດ້ກັ້ນເອົາໄວ້?24ເພາະຂ້າ-
ນ້ອຍຖອນຫາຍໃຈແທນການກິນອາຫານ; ການຮ້ອງໄຫ້ຂອງຂ້ານ້ອຍເທອອກມາເຫມືອນນ້ໍາໄຫລ.
25ເພາະສິ່ງນັ້ນທີ່ຂ້ານ້ອຍຢ້ານກົວກໍໄດ້ມາເຫນືອຂ້ານ້ອຍແລ້ວ; ສິ່ງທີ່ຂ້ານ້ອຍໄດ້ຢ້ານກົວ ກໍໄດ້ມາເຖິງຂ້ານ້ອຍແລ້ວ.26ຂ້ານ້ອຍບໍ່ມີຄວາມສະ-
ຫງົບ, ແລະຂ້ານ້ອຍໄດ້ຢຸດພັກຜ່ອນ; ແຕ່ຄວາມຍາກລໍາບາກກັບມາແທນທີ່."


generated on Tue Jun 17 19:01:42 2025

4 [1]ຕໍ່ມາເອລີຟັດ ຊາວເຕມານໄດ້ຕອບ ແລະເວົ້າວ່າ,[2]ຖ້າຫາກມີຄົນພະຍາຍາມເວົ້າກັບເຈົ້າ, ເຈົ້າຈະມີຄວາມອົດທົນບໍ?
ແຕ່ແມ່ນໃຜທີ່ສາມາດຢຸດການເວົ້າຂອງເຂົາເອງໄດ້?[3]ເບິ່ງແມ, ເຈົ້າໄດ້ສັ່ງສອນມາຫລາຍແລ້ວ; ເຈົ້າໄດ້ເສີມກຳລັງມືທີ່ອ່ອນແຮງ.

[4]ຖ້ອຍຄຳຂອງເຈົ້າໄດ້ຫນູນໃຈຄົນທີ່ກຳລັງຈະລົ້ມລົງ; ເຈົ້າໄດ້ເຮັດໃຫ້ບັນດາຫົວເຂົ່າທີ່ອ່ອນເປ້ຍໃຫ້ເຂັ້ມແຂງຂຶ້ນ.[5]ແຕ່ບັດນີ້ ຄວາມຍາກລຳບາກ
ໄດ້ມາຖືກເຈົ້າແລ້ວ; ເຮັດໃຫ້ເຈົ້າອ່ອນແຮງໄປ; ມັນແຕະຕ້ອງເຈົ້າ, ແລະ ເຈົ້າກໍທຸກທໍຣະມານ.[6]ບໍ່ແມ່ນຄວາມຢຳເກງຂອງເຈົ້າ, ແລະ
ຄວາມຫມັ້ນໃຈຂອງເຈົ້າ ແລະ ຄວາມຊື່ສັດຂອງເຈົ້າທີ່ເປັນຄວາມຫວັງຂອງເຈົ້າບໍ?
[7]ຂໍໃຫ້ເຈົ້າຄິດເຖິງສິ່ງນີ້, ມີໃຜທີ່ເຄີຍຖືກລົງໂທດເມື່ອເຂົາບໍ່ມີຄວາມຜິດຫລື? ຫລືມີເວລາໃດທີ່ຄົນຊອບທັມແຕ່ໄດ້ຮັບຄວາມພິນາດ?[8]ຕາມສິ່ງທີ່
ຂ້ອຍໄດ້ເຫັນມາ, ຄົນເຫລົ່ານັ້ນທີ່ໄຖ່ຄວາມຜິດ, ຫວ່ານຄວາມເດືອນຮ້ອນ ແລະ ກໍຕ້ອງເກັບກ່ຽວສິ່ງເຫລົ່ານັ້ນ.[9]ໂດຍລົມພະຍຸຂອງພຣະເຈົ້າ
ພວກເຂົາຈຶ່ງພິນາດ; ໂດຍການລະບາຍລົມແຫ່ງພຣະພິໂຣດຂອງພຣະອົງ ພວກເຂົາກໍຖືກເຜົາຜານໄປ.
[10]ສຽງແຜດຮ້ອງຄວນຄາງຂອງສິງ, ສຽງຂອງສິງຮ້າຍ, ແຂ້ວຂອງບັນດາສິງໂຕຫນຸ່ມ - ພວກມັນຖືກທຳລາຍ.[11]ສິງໂຕພິນາດເພາະຂາດເຫຍື່ອ;
ບັນດາລູກຂອງມັນ ຖືກເຮັດໃຫ້ກະຈັດກະຈາຍໄປທຸກໆບ່ອນ.
[12]ບັດນີ້ ເລື່ອງຫນຶ່ງທີ່ໄດ້ມາເຖິງຂ້ອຍຢ່າງເປັນຄວາມລັບ, ແລະຫູຂອງຂ້ອຍໄດ້ຍິນສຽງກະຊິບກ່ຽວກັບສິ່ງນັ້ນ.
[13]ດັ່ງຝັນຮ້າຍທີ່ກຸກກວນຂ້ອຍນອນຕອນກາງຄືນ, ເມື່ອຄົນກຳລັງນອນລັບຕື່ນຕົກໃຈ.
[14]ໃນຍາມຄ່ຳຄືນເມື່ອຄວາມຢ້ານກົວ ແລະການຕົວສັ່ນເຫນືອຂ້ານ້ອຍ ແລະ ກະດູກທັງຫມົດຂອງຂ້ານ້ອຍກໍຖືກສັ່ນສະທ້ານ.[15]ເມື່ອມີ
ວິນຍານດວງຫນຶ່ງໄດ້ພັດຫນ້າຂ້ານ້ອຍໄປ, ແລະຂົນຫນັງຂອງຂ້ານ້ອຍ ກໍລຸກດ້ວຍຄວາມຕົກໃຈ.
[16]ວິນຍານດວງນັ້ນໄດ້ຢືນຢູ່ທີ່ນັ້ນ, ແຕ່ຂ້ານ້ອຍບໍ່ສາມາດຈ້ອງເບິ່ງລັກສະນະຂອງວິນຍານນັ້ນໄດ້, ມີຮູບຮ່າງຫນຶ່ງຢູ່ຕໍ່ຕາຂອງຂ້ານ້ອຍ;
ມີຄວາມງຽບ, ແລະຂ້ານ້ອຍໄດ້ຍິນສຽງດັ່ງອອກມາວ່າ:[17]"ມະນຸດທີ່ຕ້ອງການຕາຍສາມາດເປັນຜູ້ຄົນຊອບທັມໄດ້ຫລາຍກວ່າ
ພຣະເຈົ້າເປັນແນວໃດນັ້ນບໍ? ມະນຸດຄົນຫນຶ່ງສາມາດເປັນຜູ້ບໍຣິສຸດກວ່າພຣະຜູ້ສ້າງຂອງເຂົາຢ່າງນັ້ນບໍ?
[18]ເບິ່ງແມ, ຖ້າພຣະເຈົ້າບໍ່ມອບຄວາມໄວ້ວາງໃຈແກ່ບັນດາຜູ້ຮັບໃຊ້ຂອງພຣະອົງ; ຖ້າພຣະອົງກ່າວກ່າວໂທດເທວະດາເຫລົ່ານັ້ນຂອງພຣະອົງວ່າ,
ໂງ່ຈ້າ.[19]ແລ້ວມັນຈະຍິ່ງເປັນຈິງຫລາຍຂຶ້ນເທົ່າໃດ ຫລືສຳລັບຄົນເຫລົ່ານັ້ນທີ່ອາໃສໃນເຮືອນສ້າງດ້ວຍດິນຫນຽວ,
ຄົນທີ່ຖານຮາກຂອງເຂົາເປັນຂີ້ຝຸ່ນ, ຄົນທີ່ຖືກບີບເຫມືອນບີບແມງເມົ້າ.
[20]ໃນຊ່ວງລະຫວ່າງຕອນເຊົ້າ ແລະຕອນແລງພວກເຂົາຖືກທຳລາຍ; ພວກເຂົາພິນາດໂດຍປາສະຈາກຄົນໃດສັງເກດເຫັນພວກເຂົາ.
[21]ສາຍເຕັນທັງຫລາຍຂອງພວກເຂົາບໍ່ໄດ້ຖືກແກ້ອອກຈາກທ່າມກາງພວກເຂົາຫລື? ພວກເຂົາຕາຍ, ພວກເຂົາຕາຍໄປໂດຍປາສະຈາກປັນຍາ.

5 1ຮ້ອງອອກດຽວນີ້; ມີຜູ້ໃດຈະຕອບເຈົ້າບໍ? ຜູ້ບໍຣິສຸດຄົນໃດທີ່ເຈົ້າຈະຫັນໄປຫາບໍ? 2ເພາະຄວາມໂກດເຄືອງຂ້າຄົນໂງ່; ຄົນ
ອິດສາຂ້າຄົນບໍ່ຮູ້ສຳນຶກ. 3ຂ້ານ້ອຍເຄີຍເຫັນຄົນໂງ່ຈ້າເຖິງຮາກ, ແຕ່ທັນໃດນັ້ນຂ້ານ້ອຍກໍໄດ້ໄດ້ແຊ່ງສາບບ້ານຂອງເຂົາ.

4ບັນດາລູກຫລານຂອງລາວຢູ່ຫ່າງໄກຈາກຄວາມປອດພັຍ; ພວກເຂົາຖືກກະບົດບິບທີ່ຢູ່ປະຕູເມືອງ. ບໍ່ມີໃຜຊ່ວຍກູ້ພວກເຂົາໄດ້. 5ຄົນຜູ້
ອຶດຢາກກໍເຂົ້າ ຈະກິນພືດຜົນ ທີ່ເກັບກ່ຽວຂອງພວກເຂົາ; ພວກເຂົາເກັບພືດຜົນແມ້ແຕ່ເມັດທີ່ຕົກທ່າມກາງພຸ່ມຫນາມ. ຄົນທີ່ຫິວກະຫາຍ -
ກໍປາຖະຫນາຄວາມຫມັ້ນຄົງຂອງພວກເຂົາ.
6ເພາະຄວາມລຳບາກທັງຫລາຍບໍ່ໄດ້ງອກອອກມາຈາກດິນ; ຫລືຄວາມທຸກຍາກບໍ່ໄດ້ງອກມາຈາກພື້ນດິນ. 7ແຕ່ມະນຸດທັງປວງເກີດມາເພື່ອຄວາມ
ຍາກລຳບາກ, ເຫມືອນກັບແປວໄຟຍ່ອມປິວຂຶ້ນຈາກກອງໄຟ.
8ແຕ່ສຳລັບຂ້ານ້ອຍ, ຂ້ານ້ອຍຈະຄືນໄປຫາພຣະເຈົ້າ; ຕໍ່ຫນ້າພຣະອົງ ຂ້ານ້ອຍຈະມອບເລື່ອງລາວຂອງຂ້ານ້ອຍ— 9ພຣະອົງຜູ້ຊົງກະ-
ທຳການອັນຍິ່ງໃຫຍ່, ຍາກທີ່ຈະເຂົ້າໃຈສິ່ງຕ່າງໆທີ່ອັສະຈັນຢ່າງນັບບໍ່ຖ້ວນ. 10ພຣະອົງຊົງປຣະທານຝົນຕົກລົງມາເທິງແຜ່ນດິນ, ແລະຊົງໃຫ້ນ້ຳ
ຝົນຫົດທົ່ງນາທັງຫລາຍ.
11ພຣະອົງຊົງເຮັດແບບນີ້ ເພື່ອຍົກຄົນຕໍ່າຕ້ອຍໃຫ້ສູງຂຶ້ນ; ເພື່ອຍົກຊູຄົນເຫລົ່ານັ້ນທີ່ໂສກເສົ້າເສຍໃຈໃຫ້ຢູ່ຢ່າງປອດພັຍ. 12ພຣະອົງຊົງຂັດຂວາງ
ເລ້ກົນຂອງຄົນຫລອກລວງ, ເພື່ອມືຂອງພວກເຂົາຈະບໍ່ສາມາດເຮັດຫຍັງສຳເລັດໄດ້. 13ພຣະອົງໄດ້ວາງກົນອຸບາຍຄົນທີ່ສະຫລາດ
ດ້ວຍການກະທຳອັນຫລອກລວງຂອງພວກເຂົາ; ແຜນການຕ່າງໆຂອງຄົນທີ່ບິດເບືອນກໍເລັ່ງພວກເຂົາໄປສູ່ຈຸດຈົບ.
14ພວກເຂົາຜະເຊີນຫນ້າກັບຄວາມມືດໃນຊ່ວງເວລາກາງວັນ, ແລະໃນ ຊ່ວງເວລາກາງເວັນເຫມືອນກັບມັນເປັນເວລາກາງຄືນ. 15ແຕ່ພຣະເຈົ້າຊົງ
ຊ່ວຍຄົນຍາກຈົນໃຫ້ພົ້ນຈາກຄວາມຕາຍ ດ້ວຍຄົມດາບຂອງພວກເຂົາ ແລະຄົນຂັດສົນຈາກມືຂອງຄົນທີ່ມີກຳລັງ. 16ດັ່ງນັ້ນ
ຄົນຍາກຈົນຈຶ່ງມີຄວາມຫວັງ, ແລະຄວາມຍຸຕິທັມປິດປາກຂອງນາງເອງ.
17ເບິ່ງແມ, ພຣະພອນເປັນຂອງຄົນທີ່ພຣະເຈົ້າຊົງຕິສອນ; ດ້ວຍເຫດນີ້, ຂໍຢ່າໄດ້ດູຫມິ່ນການຕິສອນຂອງພຣະອົງຜູ້ຊົງຍິ່ງໃຫ່ຍ. 18ເພາະພຣະ-
ອົງຊົງເຮັດໃຫ້ບາດເຈັບ ແລະ ຈາກນັ້ນພຣະອົງຊົງພັນບາດແຜໃຫ້; ພຣະອົງຊົງໃຫ້ບາດແຜ ແລະ ຈາກນັ້ນມືຂອງພຣະອົງຊົງປິ່ນປົວ. 19ພຣະອົງ
ຈະຊົງຊ່ວຍເຈົ້າຈາກຄວາມທຸກຍາກຫົກຢ່າງແລ້ວ; ແທ້ຈິງ, ໃນຄວາມທຸກຍາກເຈັດຢ່າງ; ບໍ່ມີຄວາມຊົ່ວໃດທີ່ຈະແຕະຕ້ອງເຈົ້າໄດ້.
20ເມື່ອມີການອຶດຢາກ ພຣະອົງຈະຊົງຊ່ອຍເຈົ້າບໍ່ໃຫ້ຕາຍ; ແລະ ໃນສົງຄາມຈາກມືທີ່ມີດາບທັງຫລາຍ.
21ເຈົ້າຈະຖືກເຊື່ອງເອົາໄວ້ຈາກລີ້ນທີ່ປະນາມ; ແລະ ເຈົ້າຈະບໍ່ຢ້ານກົວການທຳລາຍເມື່ອວັນນັ້ນມາເຖິງ. 22ເຈົ້າຈະຫົວຂວັນການທຳລາຍ ແລະ
ການອຶດຢາກ, ແລະ ເຈົ້າຈະບໍ່ຢ້ານກົວສັດປ່າທັງຫລາຍແຫ່ງແຜ່ນດິນໂລກ.
23ເພາະເຈົ້າຈະມີພັນທະສັນຍາກັບບັນດາກ້ອນຫີນໃນທົ່ງນາ, ແລະ ບັນດາສັດຮ້າຍຈະຜູກມິດກັບເຈົ້າ. 24ເຈົ້າຈະຮູ້ວ່າຜ້າເຕັນຂອງເຈົ້າຢູ່ໃນຄວາມ
ປອດພັຍ; ເຈົ້າຈະຢ້ຽມຢາມຝູງແກະຂອງເຈົ້າ ແລະ ເຈົ້າຈະບໍ່ສູນເສຍສິ່ງໃດໆເລີຍ. 25ເຈົ້າຈະຮູ້ດ້ວຍວ່າລູກຫລານຂອງເຈົ້າຈະຍິ່ງໃຫຍ່,
ເຊື້ອສາຍຂອງເຈົ້າຈະເປັນເຫມືອນຕົ້ນຫຍ້າຢູ່ເທິງພື້ນດິນ;
26ເຈົ້າຈະມາເຖິງທີ່ອຸໂມງຝັງສົບ, ເມື່ອເຈົ້າເຖົ້າແກ່ເຫມືອນເມັດເຂົ້າສຸກ ທີ່ຖືກນຳມາຕາມເວລາຂອງມັນ. 27ເບິ່ງແມ, ເຮົາໄດ້ກວດສອບສິ່ງນີ້ແລ້ວ,
ມັນເປັນເຊັ່ນນີ້; ຈົ່ງຟັງໃຫ້ດີ, ແລະຮູ້ສິ່ງນີ້ເພື່ອຕົວຂອງເຈົ້າເອງ ເຖີ້ນ."

 generated on Tue Jun 17 19:01:42 2025

# 6

1ແລ້ວໂຢບຈຶ່ງຕອບວ່າ ແລະ ເວົ້າວ່າ,2“ໂອ, ຖ້າພຽງຄວາມເສົ້າໂສກຂອງຂ້ານ້ອຍ; ໄດ້ຮັບການຊັ່ງນ້ຳຫນັກ; ຖ້າເອົາຄວາມລຳບາກຍາກເຂັນ
ຂອງຂ້ານ້ອຍມາວາງໃສ່ໄວ້ໃນຕາຊິງ!3ບັດນີ້ ມັນຄົງຈະຫນັກຍິ່ງກວ່າດິນຊາຍໃນທະເລ. ນັ້ນຈຶ່ງເປັນສາເຫດທີ່ຄຳເວົ້າຂອງຂ້າ
ນ້ອຍຂາດການຕຶກຕອງ.

4ເພາະທະນູທັງຫລາຍຂອງອົງຜູ້ຊົງມີຣິດທານຸພາບກໍຢູ່ໃນຕົວຂ້ານ້ອຍ, ຈິດວິນຍານຂອງຂ້ານ້ອຍດື່ມຢາພິດ; ຄວາມຫນ້າຢ້ານຂອງພຣະ-
ເຈົ້າໄດ້ຖືກຈັດແຖວເຂົ້າມາຕໍ່ສູ້ຂ້ານ້ອຍ.5ລາວາປ່າຈະຮ້ອງຢ່າງສິ້ນຫວັງ ເມື່ອມັນມີຫຍ້າກິນນັ້ນຫລື? ຫລືງົວຜູ້ອ່ອນເພຍດ້ວຍຄວາມຫິວ
ເມື່ອມັນມີເຟືອງໃຫ້ກິນບໍ?6ຈະກິນສິ່ງທີ່ຈືດໂດຍບໍ່ໃສ່ເກືອໄດ້ບໍ? ຫລືໄຂ່ຂາວນັ້ນມີຣົດແຊບຫລື?
7ຂ້ານ້ອຍປະຕິເສດບໍ່ແຕະຕ້ອງສິ່ງເຫລົ່ານັ້ນ; ກັບເປັນອາຫານເຫລົ່ານັ້ນ ເປັນຫນ້າລັງກຽດສຳລັບຂ້ານ້ອຍ. 8ໂອ, ຂ້ານ້ອຍມີຄຳຮ້ອງຂໍ; ໂອ,
ທີ່ພຣະເຈົ້າຈະປຣະທານສິ່ງທີ່ຂ້ານ້ອຍປາຖະຫນາໃຫ້ແກ່ຂ້ານ້ອຍ:9ມັນຄົງເຮັດໃຫ້ພຣະເຈົ້າພໍພຣະທັຍທີ່ຈະບົບຄັ້ນຂ້ານ້ອຍ, ທີ່ພຣະອົງຈະໃຊ້
ພຣະຫັດຂອງພຣະອົງ ແລະ ຕັດຂ້ານ້ອຍອອກໄປຈາກຊີວິດນີ້!
10ຂໍໃຫ້ສິ່ງນີ້ເປັນການປອບໃຈຂອງຂ້ານ້ອຍ—ເຖິງແມ່ນວ່າຂ້ານ້ອຍເຈັບປວດຢ່າງແສນສາຫັດ ໂດຍບໍ່ໄດ້ຮັບການບັນເທົາລົງ:
ທີ່ຂ້ານ້ອຍບໍ່ປະຕິເສດພຣະຄັມຂອງອົງບໍຣິສຸດນັ້ນ.11ແມ່ນຫຍັງຄືກຳລັງຂອງຂ້ານ້ອຍ, ທີ່ຂ້ານ້ອຍສົມຄວນຖອຍຫລື? ຈຸດອາວະສານ
ຂອງຂ້ານ້ອຍແມ່ນຫຍັງ, ທີ່ຂ້ານ້ອຍຈະຕໍ່ຊີວິດຂອງຂ້ອຍອອກໄປໄດ້?
12ກຳລັງຂອງຂ້ານ້ອຍເປັນກຳລັງຂອງບັນດາກ້ອນຫີນບໍ? ຫລືເນື້ອຫນັງຂອງຂ້ານ້ອຍເຮັດຈານທອງເຫລືອງຫລືຢ່າງໃດ?13ມັນບໍ່ເປັນຄວາມຈິງ
ຫລືທີ່ຂ້ານ້ອຍບໍ່ມີຄວາມຊ່ວຍເຫລືອອັນໃດໃນຕົວເອງຂອງຂ້ານ້ອຍ, ແລະສະຕິປັນຍາກໍຖືກໄລ່ອອກຈາກຂ້ານ້ອຍແລ້ວ?
14ຕໍ່ຄົນທີ່ລົ້ມລົງ, ເພື່ອນໆຂອງເຂົາຄວນສະແດງຄວາມສັດຊື່ຕໍ່ລາວ; ແມ້ແຕ່ລາວຜູ້ທີ່ປະຖິ້ມຄວາມຢຳເກງຂອງອົງຜູ້ມີຣິດທານຸພາບກໍຕາມ.
15ແຕ່ພີ່ນ້ອງທັງຫລາຍຂອງຂ້ານ້ອຍ ໄດ້ໃຫ້ຄວາມຊື່ສັດແກ່ຂ້ານ້ອຍ ທີ່ເປັນເຫມືອນສາຍນ້ຳເຫືອດແຫ້ງ, ເປັນເຫມືອນສາຍນ້ຳ
ທີ່ເຫືອດຫາຍໄປສູ່ຄວາມເປົ່າຫວ່າງ.16ຊຶ່ງຖືກເຮັດໃຫ້ມືດທຶບເພາະນ້ຳກ້ອນປົກຄຸມພວກມັນ, ແລະເພາະມີຫິມະທີ່ເຊື່ອງຢູ່ພາຍໃນພວກມັນ.
17ເມື່ອພວກມັນລະລາຍ, ພວກມັນກໍຫາຍໄປ; ເມື່ອອາກາດຮ້ອນ, ພວກມັນລະລາຍໄຫລອອກໄປຈາກທີ່ຂອງພວກມັນ.
18ພວກຫມູ່ຄົນທີ່ເດີນທາງໄປ ຕາມທາງຂອງພວກເຂົາຊອກຫານ້ຳ; ພວກເຂົາພະເນຈອນເຂົ້າໄປໃນດິນແດນທີ່ແຫ້ງແລ້ງຫ່ຽວແຫ້ງ.
19ພວກຫມູ່ຄົນຈາກເມືອງເຕມາຫລຽວເບິ່ງໄປ ທີ່ນັ້ນໃນຂະນະທີ່ສະຫາຍທັງຫລາຍແຫ່ງເຊບາ ກໍຫວັງໃນສິ່ງດຽວກັນ.20ພວກເຂົາຕ້ອງຜິດຫວັງ
ເພາະພວກເຂົາຫມັ້ນໃຈວ່າຈະໄດ້ພົບນ້ຳ. ພວກເຂົາໄດ້ໄປເຖິງບ່ອນນັ້ນ, ແຕ່ພວກເຂົາຖືກຫລອກ.
21ເພາະເວລານີ້ ພວກເຈົ້າຄືເພື່ອນທັງຫລາຍກໍບໍ່ມີຄວາມຫມາຍສຳລັບຂ້ອຍ; ພວກເຈົ້າເຫັນຄວາມລຳບາກຍາກເຂັນຂອງຂ້ອຍ ແລະຄວາມຢ້ານ
ກົວ.22ຂ້ອຍໄດ້ເວົ້າກັບພວກເຈົ້າວ່າ ‘ຂໍຂອງຂວັນໃຫ້ຂ້ອຍແດ່?’ ຫລື ‘ຂໍສິນບົນຈາກຊັບສິນຂອງພວກເຈົ້າໃຫ້ຂ້ອຍ?’23ຫລື ‘ຂໍຊ່ວຍຂ້ອຍໃຫ້ພົ້ນ
ຈາກມືຂອງສັດຕຣູ?’ ຫລື ‘ຂໍໄຖ່ຂ້ອຍຈາກມືຂອງພວກຜູ້ມີອຳນາດບໍ?’
24ສອນຂ້ານ້ອຍແດ່, ແລະ ຂ້ານ້ອຍຈະຍຶດຫມັ້ນໃນສັນຕິສຸກຂອງຂ້ານ້ອຍ; ຂໍເຮັດໃຫ້ຂ້ານ້ອຍເຂົ້າໃຈວ່າ ຂ້ານ້ອຍຜິດໃນເລື່ອງໃດ.
25ຖ້ອຍຄຳຄວາມຈິງນີ້ ເຮັດໃຫ້ເຈັບປວດຈິງຫລື! ແຕ່ການໂຕ້ແຍ້ງຕ່າງໆຂອງພວກເຈົ້າ, ແທ້ຈິງແລ້ວເປັນການຕຳນິຂ້ອຍວ່າ
ມີຄວາມຜິດແນວໃດ?
26ພວກເຈົ້າວາງແຜນທີ່ຈະເມີນເສີຍຄຳປາໄສຂອງຂ້ອຍຫລືບໍ່, ປະຕິບັດຕໍ່ຄຳປາໄສທັງສິ້ນຂອງຊາຍຄົນຫນຶ່ງທີ່ຫມົດຫວັງເຫມືອນກັບສາຍລົມບໍ?
27ແທ້ຈິງແລ້ວ, ພວກເຈົ້າຈັບສະຫລາກເພື່ອເອົາລູກກຳພ້າພໍ່, ແລະ ຕໍ່ລອງລາຄາເພື່ອນຂອງພວກເຈົ້າເຫມືອນກັບເຂົາເປັນສິນຄ້າ.
28ດັ່ງນັ້ນ, ບັດນີ້, ຂໍເບິ່ງຂ້ອຍ ເພາະແນ່ນອນທີ່ຂ້ອຍຈະບໍ່ຂີ້ຕົວະຕໍ່ຫນ້າພວກເຈົ້າ.29ຂໍຈົ່ງຄືນມາຄິດໃຫມ່ເຖີ້ນ, ຂ້ອຍຂໍຮ້ອງພວກເຈົ້າ; ຢ່າ
ປ່ອຍໃຫ້ມີຄວາມບໍ່ເປັນທັມກັບພວກເຈົ້າເລີຍ; ຈົ່ງທີ່ສຸດ, ຂໍຄືນມາຄິດໃຫມ່ເຖີດ, ເພາະເລື່ອງລາວຂອງ ຂ້ອຍກໍຊອບທັມຢູ່.30ລີ້ນຂອງຂ້ອຍມີ
ຄວາມຊົ່ວຊ້າບໍ? ປາກຂອງຂ້ອຍບໍ່ຮູ້ຣົດຊາດສິ່ງຕ່າງໆ ທີ່ປອງຮ້າຍໄດ້ແມ່ນບໍ?


generated on Tue Jun 17 19:01:42 2025

7 1“ມະນຸດບໍ່ໄດ້ເຮັດວຽກຫນັກເທິງແຜ່ນດິນໂລກບໍ? ມື້ທັງຫລາຍຂອງເຂົາບໍ່ໄດ້ເປັນເຫມືອນມື້ທັງຫລາຍ ຂອງຄົນທີ່ເປັນລູກຈ້າງຄົນຫນຶ່ງບໍ?
2ເຫມືອນກັບລູກຈ້າງຄົນຫນຶ່ງ ກັບລູກຈ້າງຄົນຫນຶ່ງທີ່ຄອຍຖ້າຄ່າແຮງງານຂອງຕົນ—3ດັ່ງນັ້ນ ຂ້ານ້ອຍຈຶ່ງຖືກເຮັດໃຫ້ອົດທົນຕໍ່ເດືອນທັງຫລາຍ
ແຫ່ງຄວາມທຸກຍາກຂອງຂ້ານ້ອຍ; ຂ້ານ້ອຍໄດ້ຮັບມອບຄືນທັງຫລາຍທີ່ເຕັມໄປດ້ວຍຄວາມຍາກລຳບາກ.

4ເມື່ອຂ້ານ້ອຍນອນລົງ, ຂ້ານ້ອຍກ່າວກັບຕົນເອງວ່າ, 'ເມື່ອໃດຫນໍ ຂ້ານ້ອຍຈະລຸກຂຶ້ນ ແລະເມື່ອໃດທີ່ກາງຄືນນັ້ນຈະຜ່ານພົ້ນໄປ?' ຂ້ານ້ອຍກໍ
ພິກໄປພິກມາຈົນຮຸ່ງເຊົ້າ.5ເນື້ອຫນັງຂອງຂ້ານ້ອຍເຕັມໄປດ້ວຍຫນອນ ແລະເຕັມໄປດ້ວຍຂີ້ຝຸ່ນ; ບາດແຜໃນ ເນື້ອຫນັງຂອງຂ້ານ້ອຍກໍຫ່ຽວແຫ້ງ
ໄປ ແລະມີນ້ຳຫນອງໄຫລອອກມາ
6ມື້ທັງຫລາຍຂອງຂ້ານ້ອຍ ກໍໄວກວ່າກະສວຍທໍຜ້າຂອງຊ່າງທໍ; ແລະພວກມັນຜ່ານໄປໂດຍສິ້ນສຸດລົງດ້ວຍຂາດຄວາມຫວັງ.7ພຣະເຈົ້າ,
ຊົງເອີ້ນມາເພື່ອໃຫ້ຈົດຈຳວ່າຊີວິດຂອງຂ້ານ້ອຍເປັນພຽງລົມຫາຍໃຈ; ຈະບໍ່ໄດ້ເຫັນສິ່ງທີ່ດີອີກຕໍ່ໄປແລ້ວ.
8ດວງຕາຂອງພຣະເຈົ້າ, ຜູ້ຊົງເບິ່ງຂ້ານ້ອຍຈະບໍ່ຊົງເບິ່ງຂ້ານ້ອຍອີກຕໍ່ໄປ; ດວງຕາຂອງພຣະເຈົ້າ ຈະຢູ່ເຫນືອຂ້ານ້ອຍ, ແຕ່ຂ້ານ້ອຍຈະບໍ່ໄດ້ຢູ່ເສຍ
ແລ້ວ.9ເຫມືອນກັບກ້ອນເມກທີ່ຖືກສະລາຍຈາງໄປ ແລະ ຈາງຫາຍໄປສັນໃດ, ດັ່ງບຸກຄົນທີ່ລົງໄປສູ່ແດນຄົນຕາຍກໍບໍ່ໄດ້ຂຶ້ນມາສັນນັ້ນ.10ລາວຈະ
ບໍ່ກັບໄປເຮືອນຂອງຕົນອີກ; ຫລືສະຖານທີ່ຂອງລາວກໍຈະບໍ່ຮູ້ຈັກຕໍ່ໄປອີກເລີຍ.
11ເພາະສະນັ້ນ ຂ້ານ້ອຍຈຶ່ງບໍ່ຫ້າມປາກຂອງຂ້ານ້ອຍ; ຂ້ານ້ອຍຈະເວົ້າດ້ວຍຄວາມທຸກແສນຣະທົມໃນວິນຍານຂອງຂ້ານ້ອຍ; ຂ້ານ້ອຍຈະຈົ່ມ
ດ້ວຍຄວາມຂົມຂື່ນໃນຈິດໃຈຂອງຂ້ານ້ອຍ.12ຂ້ານ້ອຍເປັນທະເລ ຫລື ເປັນສັດຮ້າຍແຫ່ງທະເລທີ່ພຣະອົງຊົງວາງເວນຍາມໄວ້
ເພື່ອປົກປ້ອງເຫນືອຂ້ານ້ອຍນັ້ນຫລື?
13ເມື່ອຂ້ານ້ອຍເວົ້າວ່າ, ‘ຕຽງຂອງຂ້ານ້ອຍຈະໃຫ້ຄວາມສະບາຍແກ່ຂ້ານ້ອຍ, ແລະຕັ່ງອີ່ຂອງຂ້ານ້ອຍ ຈະບັນເທົາການຮ້ອງທຸກຂອງ
ຂ້ານ້ອຍ,’14ແລ້ວພຣະອົງກໍເຮັດໃຫ້ຂ້ານ້ອຍຢ້ານກົວດ້ວຍຄວາມຝັນທັງຫລາຍ ແລະຊົງຂູ່ຂ້າຂ້ານ້ອຍ ໂດຍຜ່ານທາງນິມິດທັງຫລາຍ.15ດັ່ງນັ້ນ
ຂ້ານ້ອຍຈຶ່ງເລືອກການຮັດຄໍຕາຍ ແລະຄວາມຕາຍຊຶ່ງດີກວ່າການມີຊີວິດຢູ່ ກັບກະດູກເຫລົ່ານີ້ຂອງຂ້ານ້ອຍ.
16ຂ້ານ້ອຍເບື່ອຊີວິດຂອງຂ້ານ້ອຍ; ຂ້ານ້ອຍຈະບໍ່ປາຖະຫນາມີຊີວິດຢູ່ສະເຫມີໄປ; ຂໍຊົງປ່ອຍຂ້ານ້ອຍໄວ້ພຽງລຳພັງເຖີດ
ເພາະວັນທັງຫລາຍຂອງຂ້ານ້ອຍ ເປັນແຕ່ພຽງສິ່ງທີ່ໄຮ້ປະໂຫຍດ.17ມະນຸດເປັນສິ່ງໃດ ທີ່ພຣະອົງຊົງສົມຄວນເອົາໃຈໃສ່ລາວ,
ທີ່ພຣະອົງຊົງສົມຄວນຈະມີໃຈຈົດຈໍ່ກັບລາວ.18ທີ່ພຣະອົງສົມຄວນເຝົ້າເບິ່ງລາວທຸກເຊົ້າ ແລະທົດສອບລາວທຸກເທື່ອຫລື?
19ອີກດົນປານໃດ ທີ່ມັນຈະຢູ່ຕໍ່ຫນ້າພຣະອົງ ຈະຊົງເບິ່ງຫນີໄປຈາກຂ້ານ້ອຍ, ກ່ອນທີ່ພຣະອົງຈະປ່ອຍຂ້ານ້ອຍໄວ້ຕາມລຳພັງ ເພື່ອຂ້ານ້ອຍຈະກືນ
ນ້ຳລາຍຂອງຕົນລົງຄໍໄດ້.20ເຖິງແມ່ນ ຂ້ານ້ອຍໄດ້ເຮັດບາບໄປ, ແລ້ວການກະທຳອັນໃດທີ່ເຮັດຕໍ່ພຣະອົງ, ຜູ້ຊົງປົກປັກຮັກສາມະນຸດທັງຫລາຍ?
ເປັນຫຍັງພຣະອົງຈຶ່ງໄດ້ເຮັດໃຫ້ຂ້ານ້ອຍເປັນເປົ້າຂອງພຣະອົງ, ດັ່ງນັ້ນຂ້ານ້ອຍຈຶ່ງເປັນພາລະຫນັກສຳລັບພຣະອົງ?
21ເປັນຫຍັງພຣະອົງບໍ່ອະພັຍແກ່ການລະເມີດຂອງຂ້ານ້ອຍ ແລະ ນຳເອົາຄວາມຊົ່ວຊ້າຂອງຂ້ານ້ອຍອອກໄປຫລື? ເພາະບັດນີ້ ຂ້ານ້ອຍຈະນອນ
ລົງໃນຂີ້ຝຸ່ນດິນ; ພຣະອົງຈະໄດ້ສະແຫວງຫາຂ້ານ້ອຍຢ່າງຖີ່ຖ້ວນ, ແຕ່ຂ້ານ້ອຍຈະບໍ່ຢູ່ທີ່ນີ້ແລ້ວ.”

 generated on Tue Jun 17 19:01:42 2025

# 8

[1]ແລ້ວບິນດັດຄົນຊູອາໄດ້ຕອບ ແລະ ເວົ້າວ່າ,[2]"ເຈົ້າຈະເວົ້າຢ່າງນີ້ຢູ່ອີກດົນປານໃດ? ຄຳເວົ້າຂອງເຈົ້າຈະເປັນລົມພາຍຸດົນປານໃດ?[3]ພຣະເຈົ້າ
ໄດ້ປັ້ນປ່ວນຄວາມຍຸຕິທັມບໍ? ຫລື ອົງຜູ້ມີຣິດທານຸພາບປັ້ນປ່ວນຄວາມທ່ຽງທັມບໍ?

[4]ບັນດາລູກທັງຫລາຍຂອງທ່ານໄດ້ເຮັດບາບຕໍ່ພຣະອົງ; ພວກເຮົາຮູ້ເລື່ອງນີ້, ເພາະພຣະອົງມອບພວກເຂົາໄວ້ໃນມືຂອງຄວາມບາບທັງຫລາຍຂອງ
ພວກເຂົາ.[5]ຖ້າເຈົ້າຈະຫມັ່ນສະແຫວງຫາພຣະເຈົ້າ ແລະນຳການອ້ອນວອນຂອງເຈົ້າຕໍ່ອົງຜູ້ມີຣິດທານຸພາບ
[6]ຖ້າເຈົ້າບໍຣິສຸດ ແລະ ທ່ຽງທັມແທ້, ແລ້ວພຣະອົງກໍຈະຊົງປຸກພຣະອົງໃຫ້ຕື່ນຂຶ້ນ ເພື່ອເຈົ້າແນ່ນອນ ແລະຊົງຟື້ນຄືນສູ່ສະຖານທີ່ອັນຄວາມຊອບ-
ທັມຂອງເຈົ້າ.[7]ເຖິງແມ່ນວ່າ ການເລີ່ມຕົ້ນຂອງເຈົ້າຈະເລັກນ້ອຍ, ແຕ່ສະຖານະຕອນທ້າຍຂອງເຈົ້າຈະຍັງຄົງຍິ່ງໃຫຍ່ຫລາຍກ່ວາ.
[8]ຂໍຈົ່ງຖາມຄົນບູຮານເບິ່ງ, ແລະເອົາໃຈໃສ່ຕໍ່ສິ່ງທີ່ບັນບັນພະບູຣຸດທັງຫລາຍຂອງພວກເຮົາໄດ້ຮຽນຮູ້.[9](ພວກເຮົາພຽງແຕ່ເປັນຄົນທີ່ເກີດມື້ວານນີ້
ເພາະມື້ທັງຫລາຍຂອງພວກເຮົາ ເທິງແຜ່ນດິນໂລກນີ້ ເປັນພຽງແຕ່ເງົາ).[10]ພວກເຂົາຈະບໍ່ສອນເຈົ້າ ແລະບອກເຈົ້າຫລື?
ພວກເຂົາຈະບໍ່ເວົ້າຖ້ອຍຄຳຕ່າງໆຈາກຫົວໃຈຂອງພວກເຂົາບໍ?
[11]ຕົ້ນກົກສາມາດເຕີບໂຕໄດ້ໂດຍບໍ່ມີບຶງໄດ້ບໍ? ຕົ້ນອໍ້ຈະງອກງາມໃນບ່ອນທີ່ບໍ່ມີນ້ຳໄດ້ບໍ?[12]ໃນຂະນະທີ່ພວກມັນຍັງຄົງຂຽວສົດ ແລະບໍ່ຖືກຕັດ,
ພວກມັນກໍຫ່ຽວແຫ້ງໄປກ່ອນຕົ້ນໄມ້ອື່ນໆ.
[13]ດັ່ງນັ້ນແລ້ວ ວິຖີຂອງທຸກຄົນທີ່ຫລົງລືມພຣະເຈົ້າ, ຄວາມຫວັງຂອງຄົນທີ່ບໍ່ນັບຖືພຣະເຈົ້າຈະພັງພິນາດໄປ.[14]ຄວາມຫມັ້ນໃຈຂອງເຂົາກໍຈະຫັກ
ສະບັ້ນໄປ, ແລະຄວາມໄວ້ວາງໃຈຂອງພວກເຂົາອ່ອນໄຫວເຫມືອນຄືໃຍແມງມຸມ.[15]ພວກເຂົາເພິ່ງເຮືອນຂອງຕົນ, ແຕ່ມັນທົນບໍ່
ໄຫວຮັບພວກເຂົາ; ເຂົາຍຶດມັນໄວ້, ແຕ່ມັນກໍບໍ່ທົນຢູ່.
[16]ພາຍໃຕ້ດວງຕາເວັນ ລາວຈະຂຽວສົດ,  ແລະກິ່ງຂອງມັນກໍງອກແຜ່ອອກໄປເທິງສວນທັງຫມົດຂອງເຂົາ.[17]ຮາກຂອງມັນກໍຫໍ່ຫຸ້ມຫີນ;
ພວກເຂົາຊອກຫາສະຖານທີ່ທີ່ດີໃນທ່າມກາງກ້ອນຫີນນັ້ນ.[18]ຖ້າບຸກຄົນນີ້ຖືກທຳລາຍໄປຈາກສະຖານທີ່ຂອງເຂົາ, ແລ້ວສະຖານທີ່ນັ້ນ
ຈະປະຕິເສດເຂົາ ແລະເວົ້າວ່າ, 'ຂ້ອຍບໍ່ເຄີຍເຫັນເຈົ້າ.'
[19]ເບິ່ງແມ, ນີ້ຄື "ຄວາມຍິນດີ" ຂອງພຶດຕິກຳຂອງບຸກຄົນ; ຫນຶ່ງຕົ້ນໄມ້ອື່ນໆ ຈະງອກຈາກດິນດຽວກັນໃນສະຖານທີ່ຂອງເຂົາ.[20]ເບິ່ງແມ, ພຣະ-
ເຈົ້າຈະບໍ່ໄດ້ປະຖິ້ມຄົນດີຮອບຄອບ, ຫລືພຣະອົງຈະປະມືຈາກຄົນທີ່ເຮັດຊົ່ວຮ້າຍ.
[21]ແຕ່ພຣະອົງຈະເຕີມປາກຂອງທ່ານດ້ວຍສຽງຫົວ, ຮີມປາກຂອງທ່ານດ້ວຍການໂຫ່ຮ້ອງສະເຫມີ.[22]ຄົນເຫລົ່ານັ້ນທີ່ກຽດຊັງເຈົ້າຈະຫົ່ມຄວາມ
ອັບອາຍ; ບ່ອນອາໄສຂອງຄົນຊົ່ວຈະບໍ່ມີຕໍ່ໄປອີກເລີຍ."


generated on Tue Jun 17 19:01:42 2025

9 1ແລ້ວໂຢບຈຶ່ງໄດ້ຕອບ ແລະເວົ້າວ່າ, 2“ຈິງແທ້ຂ້ອຍຮູ້ເລື່ອງນີ້ດີ. ເປັນຢ່າງນັ້ນແຕ່ຄົນຫນຶ່ງຄົນສາມາດເປັນຄົນຊອບທັມຕໍ່ຫນ້າພຣະ-
ເຈົ້າໄດ້ຢ່າງໃດ? 3ຖ້າລາວຕ້ອງການໂຕ້ແຍ້ງກັບພຣະເຈົ້າ, ໃນຫນຶ່ງພັນເທື່ອລາວບໍ່ສາມາດຕອບພຣະອົງໄດ້ເລີຍແມ້ແຕ່ເທື່ອດຽວ.

4ພຣະທັຍຂອງພຣະອົງເຕັມໄປດ້ວຍພຣະປັນຍາກຳລັງຂອງພຣະອົງກໍແຂງແຮງ; ມີໃຜທີ່ໄດ້ເຄີຍແຂງຂໍ້ຕໍ່ສູ້ກັບພຣະອົງ ແລະເຮັດໄດ້ສຳເລັດບໍ?
—5ພຣະອົງຜູ້ໄດ້ເຄື່ອນຍ້າຍພູເຂົາທັງຫລາຍ ເມື່ອພຣະອົງໄດ້ລົ້ມມັນດ້ວຍພຣະພິໂຣດຂອງພຣະອົງ ໂດຍບໍ່ໄດ້ເຕືອນກ່ອນ—6ພຣະອົງຜູ້ຊຶ່ງສັ່ນ
ແຜ່ນດິນໂລກໃຫ້ອອກຈາກບ່ອນຂອງມັນ ແລະຊຶ່ງເຮັດໃຫ້ຄານເສົາຂອງມັນກໍສັ່ນສະເທືອນ.
7ເຊັ່ນດຽວກັບພຣະເຈົ້າຜູ້ຊຶ່ງສັ່ງດວງຕາເວັນບໍ່ໃຫ້ຂຶ້ນມາ, ແລະມັນກໍບໍ່ຂຶ້ນມາ, ແລະຜູ້ຊຶ່ງປົກຄຸມດວງດາວທັງຫລາຍເອົາໄວ້. 8ຜູ້ຊຶ່ງໄດ້ຄຶງທ້ອງຟ້າ
ອອກ ແລະ ຊຶ່ງໄດ້ຢຽບຄື້ນທັງຫລາຍໃນທະເລ. 9ຜູ້ຊຶ່ງໄດ້ສ້າງຫມູ່ດາວແຂ້, ຫມູ່ດາວໄຖ, ຫມູ່ດາວລູກໄກ່, ແລະ ຫມູ່ດາວທິດໃຕ້
10ເຊັ່ນດຽວກັບ ຂ້ານ້ອຍຊຶ່ງກະທຳສິ່ງຍິ່ງໃຫຍ່ທັງຫລາຍ, ທີ່ບໍ່ສາມາດເຂົ້າໃຈໄດ້— ແນ່ທີ່ສຸດ, ສິ່ງອັດສະຈັນຫລວງຫລາຍຢ່າງນັບບໍ່ຖ້ວນ.
11ເບິ່ງແມ, ພຣະອົງໄດ້ຜ່ານຂ້ານ້ອຍໄປ ແລະ ຂ້ານ້ອຍບໍ່ໄດ້ເຫັນພຣະອົງ; ພຣະອົງໄດ້ຜ່ານກາຍໄປ, ຂ້ານ້ອຍບໍ່ໄດ້ສັງເກດເຫັນພຣະອົງ.
12ຖ້າພຣະອົງຊົງເອົາບາງສິ່ງໄປ, ໃຜຈະຫ້າມພຣະອົງໄດ້? ໃຜຈະສາມາດເວົ້າກັບພຣະອົງໄດ້ວ່າ, ‘ພຣະອົງໄດ້ຊົງກະທຳຫຍັງຫັ້ນ?’
13ພຣະເຈົ້າຈະບໍ່ໄດ້ຫັນພຣະພິໂຣດຂອງພຣະອົງ; ຜູ້ຊ່ວຍທັງຫລາຍຂອງເຣົາຫັບກົ້ມກາບທີ່ເບື້ອງລຸ່ມຂອງພຣະອົງ. 14ຂ້ານ້ອຍຈະຕອບພຣະອົງໄດ້
ນ້ອຍພຽງໃດ, ຂ້ານ້ອຍສາມາດເລືອກຖ້ອຍຄຳຫຍັງມາໃຫ້ເຫດຜົນກັບພຣະອົງ? 15ເຖິງແມ່ນວ່າຂ້ານ້ອຍເປັນຄົນຊອບທັມ, ຂ້ານ້ອຍກໍບໍ່ສາມາດ
ຕອບພຣະອົງໄດ້; ຂ້ານ້ອຍເຮັດໄດ້ພຽງແຕ່ຂໍພຣະກະຣຸນາຕໍ່ການພິພາກສາຂອງຂ້ານ້ອຍ.
16ເຖິງແມ່ນວ່າ ຂ້ານ້ອຍໄດ້ຮ້ອງທູນ ແລະພຣະອົງໄດ້ຊົງຕອບຂ້ານ້ອຍ, ຂ້ານ້ອຍຈະບໍ່ເຊື່ອວ່າພຣະອົງໄດ້ຟັງສຽງຂອງຂ້ານ້ອຍ. 17ເພາະພຣະ-
ອົງໄດ້ຊົງທຸບຕີຂ້ານ້ອຍດ້ວຍຄວາມປັ່ນປ່ວນ ແລະຊົງເພີ່ມທະວີບາດແຜຂອງຂ້ານ້ອຍໂດຍບໍ່ມີເຫດຜົນ. 18ພຣະອົງຈະບໍ່ຊົງ
ແມ້ແຕ່ອະນຸຍາດໃຫ້ຂ້ານ້ອຍໄດ້ຢຸດພັກຫາຍໃຈ; ກົງກັນຂວ້າມ. ພຣະອົງເຮັດໃຫ້ຂ້ານ້ອຍເຕັມໄດ້ວຍຄວາມຂົມຂື່ນ.
19ຖ້າຫາກເປັນເລື່ອງກຳລັງແລ້ວ, ເບິ່ງແມ!, ພຣະອົງຊົງເຂັ້ມແຂງ! ຖ້າຫາກເປັນເລື່ອງຄວາມຍຸຕິທັມ ໃຜສາມາດອອກຫມາຍຮຽກພຣະອົງ?
20ຖ້າແມ່ນວ່າຂ້ານ້ອຍຢູ່ໃນຄວາມຖືກຕ້ອງ, ປາກຂອງຂ້ານ້ອຍຈະກ່າວໂທດຂ້ານ້ອຍເອງ; ແລະເຖິງແມ່ນວ່າຂ້ານ້ອຍອ້າງວ່າຕົວດີຮອບຄອບ,
ຄຳເວົ້າທັງຫລາຍຂອງຂ້ານ້ອຍ ກໍຈະພິສູດໃຫ້ເຫັນວ່າ ຂ້ານ້ອຍເປັນຄົນຜິດເອງ.
21ເຖິງແມ່ນຂ້ານ້ອຍດີຮອບຄອບ, ແຕ່ຂ້ານ້ອຍກໍບໍ່ຫ່ວງຕົວເອງ; ຂ້ານ້ອຍກຽດຊັງຊີວິດຂອງຂ້ານ້ອຍເອງ 22ມັນບໍ່ແຕກຕ່າງກັນເລີຍ,
ຊຶ່ງຂ້ານ້ອຍຈຶ່ງເວົ້າວ່າ ພຣະອົງຊົງທຳລາຍທັງຄົນດີຮອບຄອບ ແລະ ທີ່ຄົນຊົ່ວຮ້າຍຄືກັນ. 23ຖ້າໂຣກລະບາດນຳຄວາມຕາຍມາໂດຍໄວ, ພຣະ-
ອົງກໍຊົງຫົວເຍາະເຍີ້ຍໃຫ້ກັບຄວາມລຳບາກຍາກເຂັນຂອງຜູ້ບໍ່ມີຄວາມຜິດ. 24ແຜ່ນດິນໂລກນີ້ໄດ້ມອບໄວ້ໃນມືຂອງຄົນຊົ່ວ, ພຣະອົງ
ຊົງປົກຄຸມຫນ້າຂອງບັນດາຜູ້ພິພາກສາຂອງແຜ່ນດິນໂລກ. ຖ້າບໍ່ແມ່ນພຣະອົງທີ່ຊົງກະທຳສິ່ງນີ້, ແລ້ວຈະແມ່ນໃຜທີ່ກະທຳ?
25ວັນທັງຫລາຍຂອງຂ້ານ້ອຍໄວກວ່ານັກແລ່ນສົ່ງສານຄົນຫນຶ່ງ; ວັນທັງຫລາຍຂອງຂ້ານ້ອຍຈະແລ່ນຫນີໄປ; ໂດຍບໍ່ເຫັນສິ່ງດີໃນທີ່ແຫ່ງໃດເລີຍ.
26ພວກມັນໄວເຫມືອນກັບເຮືອໄວ, ແລະ ໄວເຫມືອນນົກອິນຊີທີ່ບິນລົງມາຈັບເຫຍື່ອ.
27ຖ້າຂ້ານ້ອຍໄດ້ເວົ້າວ່າ ຂ້ານ້ອຍຈະລືມຄຳຮ້ອງທຸກທັງຫລາຍຂອງຂ້ານ້ອຍ, ທີ່ຂ້ານ້ອຍຈະເອົາໃບຫນ້າໂສກເສົ້າຂອງຂ້ານ້ອຍອອກໄປ
ແລະຈະມີຄວາມສຸກ, 28ຂ້ານ້ອຍຄົງຖືກເຮັດໃຫ້ເກີດຄວາມຢ້ານກົວຕໍ່ບັນດາຄວາມມທຸກຂອງຂ້ານ້ອຍ ເພາະຂ້ານ້ອຍຮູ້ວ່າພຣະອົງຈະບໍ່ຖືວ່າຂ້າ-
ນ້ອຍບໍ່ມີຄວາມຜິດ. 29ຂ້ານ້ອຍຈະຖືກລົງໂທດ; ເຫດໃດ, ແລ້ວ, ຂ້ານ້ອຍຈຶ່ງຕ້ອງພະຍາຍາມໂດຍບໍ່ມີປະໂຫຍດຢ່າງນັ້ນ?
30ຖ້າຂ້ານ້ອຍໄດ້ຊຳລະຕົວເອງ ດ້ວຍຫິມະທີ່ລະລາຍເປັນນ້ຳ ແລະໄດ້ເຮັດໃຫ້ມືຂອງຂ້ານ້ອຍສະອາດທີ່ສຸດ, 31ພຣະອົງຍັງຈະຈຸ່ມຂ້ານ້ອຍລົງໄປ
ໃນຂຸມຂີ້ຕົມ, ແລະເສື້ອຜ້າຂອງຂ້ານ້ອຍກໍເປັນທີ່ຫນ້າກຽດຊັງພ້ອມກັບຕົວຂ້ານ້ອຍ.
32ເພາະພຣະເຈົ້າບໍ່ໄດ້ເປັນມະນຸດຄືຂ້ານ້ອຍ, ຊຶ່ງຂ້ານ້ອຍເອງເປັນ, ຂ້ານ້ອຍຈະສາມາດຕອບພຣະອົງ, ຄືພວກເຮົາຈະສາມາດເຂົ້າມາໃນສານ
ນຳກັນ. 33ບໍ່ມີຜູ້ຕັດສິນຄະດີຄວາມລະຫວ່າງພວກເຮົາຄືຜູ້ທີ່ສາມາດວາງມືຂອງລາວເຫມືອນພວກເຮົາທັງສອງຝ່າຍໄດ້.
34ບໍ່ມີຜູ້ຕັດສິນຄະດີຄວາມຄົນອື່ນທີ່ສາມາດເອົາໄມ້ແສ້ຂອງພຣະເຈົ້າອອກໄປຈາກຂ້ານ້ອຍໄດ້,
ຜູ້ທີ່ສາມາດເກັບການຂົ່ມຂູ່ຂອງພຣະອົງທີ່ເຮັດໃຫ້ຂ້ານ້ອຍຢ້ານກົວໄວ້ໄດ້. 35ແລ້ວຂ້ານ້ອຍຈະເວົ້າຂຶ້ນມາ ແລະບໍ່ຢ້ານກົວພຣະອົງ, ແຕ່
ເຫມືອນກັບສິ່ງຕ່າງໆໃນເວລານີ້, ຂ້ານ້ອຍບໍ່ສາມາດເຮັດຢ່າງນັ້ນໄດ້.

10 1ຂ້ານ້ອຍເບື່ອຫນ່າຍຊີວິດຂອງຂ້ານ້ອຍ; ຂ້ານ້ອຍຈະໃຫ້ເສຣີພາບແກ່ການຮ້ອງທຸກຂອງຂ້ານ້ອຍ, ຂ້ານ້ອຍຈະເວົ້າດ້ວຍຄວາມຂົມ-
ຂື່ນໃນຈິດໃຈຂອງຂ້ານ້ອຍ. 2ຂ້ານ້ອຍຈະຮ້ອງຂໍຕໍ່ພຣະເຈົ້າວ່າ, ‘ຂໍຊົງຢ່າພຽງແຕ່ໄດ້ກ່າວໂທດຂ້ານ້ອຍເທົ່ານັ້ນ; ແຕ່ຂໍຊົງສຳແດງໃຫ້ຂ້າ-
ນ້ອຍຮູ້ວ່າເຫດໃດພຣະອົງຈຶ່ງຊົງກ່າວໂທດຂ້ານ້ອຍ. 3ມັນເປັນສິ່ງທີ່ດີສຳລັບພຣະອົງທີ່ວ່າ ພຣະອົງສົມຄວນບີບບັງຄັບຂ້ານ້ອຍ, ຫມິ່ນປະຫມາດ
ສິ່ງທີ່ອອກມາຈາກມືຂອງພຣະອົງ ໃນຂະນະທີ່ພຣະອົງຊົງຍິ້ມໃຫ້ກັບແຜນການຕ່າງໆຂອງຄົນຊົ່ວແມ່ນບໍ?

4ພຣະອົງຊົງມີດວງຕາເຫມືອນຕາຄົນບໍ? ພຣະອົງເຫັນເຫມືອນກັບມະນຸດຄົນຫນຶ່ງເຫັນບໍ? 5ວັນທັງຫລາຍຂອງພຣະອົງເປັນເຫມືອນວັນທັງຫລາຍ
ຂອງມະນຸດບໍ ຫລືປີທັງຫລາຍຂອງພຣະອົງ ເປັນເຫມືອນປີທັງຫລາຍຂອງຄົນເຮົາບໍ, 6ທີ່ພຣະອົງຊົງໄດ້ຄອຍຖ້າຈັບຄວາມຊົ່ວຊ້າຂອງຂ້ານ້ອຍ
ແລະ ຊົງຄົ້ນຫາຄວາມບາບຂອງຂ້ານ້ອຍ. 7ເຖິງແມ່ນວ່າ ພຣະອົງຊົງຮູ້ວ່າຂ້ານ້ອຍບໍ່ໄດ້ເຮັດຜິດ ແລະ ບໍ່ມີໃຜຈັກຄົນທີ່ສາມາດຊ່ວຍໃຫ້
ຂ້ານ້ອຍພົ້ນອອກຈາກມືຂອງພຣະອົງໄດ້ຢ່າງນັ້ນຫລື?
8ມືຂອງພຣະອົງໄດ້ຊົງສ້າງ ແລະປັ້ນແຕ່ງຂ້ານ້ອຍເຂົ້າດ້ວຍກັນ, ເຖິງປານນັ້ນພຣະອົງໄດ້ຫັນມາທຳລາຍຂ້ານ້ອຍເສຍ. 9ຂໍຊົງໄດ້ລະນຶກວ່າ,
ຂ້ານ້ອຍຮ້ອງທູນຂໍ, ທີ່ພຣະອົງໄດ້ຊົງປັ້ນຂ້ານ້ອຍເຫມືອນປັ້ນດິນຫນຽວນັ້ນ; ພຣະອົງຈະນຳຂ້ານ້ອຍໃຫ້ກັບໄປເປັນຂີ້ຝຸ່ນອີກຄັ້ງຢ່າງນັ້ນຫລື?
10ພຣະອົງບໍ່ໄດ້ຊົງຖອກຂ້ານ້ອຍອອກເຫມືອນຖອກນ້ຳນົມ ແລະຊົງເຮັດໃຫ້ຂ້ານ້ອຍເປັນເຫມືອນເນີຍແຂງບໍ? 11ແລະຊົງໄດ້ສານຂ້ານ້ອຍ
ເຂົ້າກັນດ້ວຍກະດູກ ແລະເສັ້ນເອັນທັງຫລາຍ.
12ພຣະອົງໄດ້ຊົງປຣະທານຊີວິດໃຫ້ແກ່ຂ້ານ້ອຍ ແລະພັນທະສັນຍາແຫ່ງຄວາມສັດຊື່; ຄວາມຊ່ວຍເຫລືອຂອງພຣະອົງໄດ້ຊົງດູແລຮັກສາວິນ-
ຍານຂ້ານ້ອຍ. 13ແຕ່ສິ່ງຕ່າງໆເຫລົ່ານີ້ ພຣະອົງໄດ້ຊົງເຊື່ອງໄວ້ໃນໃຈຂອງພຣະອົງ— ຂ້ານ້ອຍຮູ້ວ່ານີ້ເປັນພຣະປະສົງຂອງພຣະ-
ອົງໄດ້ຊົງກຳລັງຄິດ: 14ຊຶ່ງຖ້າຂ້ານ້ອຍໄດ້ເຮັດບາບ, ພຣະອົງກໍຈະສັງເກດເຫັນ; ພຣະອົງຈະບໍ່ໄດ້ປ່ອຍຕົວຂ້ານ້ອຍໄປໃນຄວາມຊົ່ວຮ້າຍຂອງຂ້າ-
ນ້ອຍ.
15ຖ້າຫາກຂ້ານ້ອຍເປັນຊົ່ວຮ້າຍ, ວິບັດຈົ່ງເກີດແກ່ຂ້ານ້ອຍເຖີດ; ແມ່ນວ່າຖ້າ ຂ້ານ້ອຍເປັນຄົນຊອບທັມ, ຂ້ານ້ອຍກໍບໍ່ສາມາດຍັງເງີຍຫົວຂອງຂ້າ-
ນ້ອຍຂຶ້ນໄດ້, ເລື່ອງຈາກຂ້ານ້ອຍຖືກເຮັດໃຫ້ເຕັມດ້ວຍການດູຫມິ່ນ ແລະຂ້ານ້ອຍກຳລັງເບິ່ງຄວາມທຸກທໍຣະມານຂອງຂ້ານ້ອຍເອງ.
16ຖ້າຫົວຂອງຂ້ານ້ອຍເງີຍຂຶ້ນເອງໄດ້, ພຣະອົງກໍຊົງໄລ່ລ່າຂ້ານ້ອຍເຫມືອນລ່າໂຕສິງໂຕຫນຶ່ງ;  ອີກຄັ້ງທີ່ພຣະອົງສະແດງຣິດທານຸ-
ພາບຂອງພຣະອົງເອງຕໍ່ຫນ້າຂ້ານ້ອຍ.
17ພຣະອົງຊົງໄດ້ນຳພະຍານຂອງພຣະອົງຄົນໃຫມ່ທັງຫລາຍມາຕໍ່ສູ້ຂ້ານ້ອຍ ແລະ ພຣະອົງໄດ້ເພີ່ມຄວາມໂກດຮ້າຍຂອງພຣະອົງເອງຕໍ່ຂ້ານ້ອຍ;
ພຣະອົງໄດ້ໂຈມຕີຂ້ານ້ອຍດ້ວຍບັນດາກອງທັບທີ່ສົດໃຫມ່ທັງຫລາຍ.
18ເຫດໃດພຣະອົງຈຶ່ງໄດ້ຊົງນຳຂ້ານ້ອຍອອກມາຈາກທ້ອງຂອງແມ່? ຂ້ານ້ອຍຢາກໃຫ້ວິນຍານຂອງຂ້ານ້ອຍ ຖືກເຮັດໃຫ້ຕາຍໄປ
ແລະບໍ່ຕ້ອງມີດວງຕາໃດໄດ້ເຄີຍເຫັນຂ້ານ້ອຍ. 19ຂ້ານ້ອຍຈະໄດ້ເປັນເຫມືອນກັບຂ້ານ້ອຍບໍ່ໄດ້ເກີດມາ; ຂ້ານ້ອຍຈະໄດ້ຖືກອຸ້ມອອກຈາກທ້ອງແມ່
ໄປເຖິງຂຸມຝັງສົບ.
20ວັນທັງຫລາຍຂອງຂ້ານ້ອຍບໍ່ໄດ້ມີພຽງແຕ່ຫນ້ອຍດຽວບໍ? ຂໍຊົງຢຸດເຖີດ, ຂໍຊົງປ່ອຍຂ້ານ້ອຍໄວ້ຢູ່ຕາມລຳພັງ ເພື່ອຂ້ານ້ອຍ
ອາດໄດ້ເຊົາພັກເລັກນ້ອຍ. 21ກ່ອນທີ່ຂ້ານ້ອຍຈະໄປສູ່ບ່ອນທີ່ໆຂ້ານ້ອຍຈະບໍ່ຫັນກັບມາອີກ, ໄປເຖິງແຜ່ນດິນແຫ່ງຄວາມມືດ ແລະດິນແດນທີ່ເປັນ
ເງົາມັດຈຸຣາດ, 22ແຜ່ນດິນທີ່ມີຄວາມມືດທຶບເຫມືອນເວລາກາງຄືນ, ເປັນແຜ່ນດິນຂອງເງົາມັດຈຸຣາດ, ຄືທີ່ໆປາສະຈາກລະບຽບ, ທີ່ຄວາມສະ-
ຫວ່າງເປັນເຫມືອນເວລາກາງຄືນ.’”

# 11

[1]ແລ້ວໂຊຟາຊາວນາອາມາໄດ້ຕອບ ແລະເວົ້າວ່າ,[2]"ຖ້ອຍຄໍາຫລວງຫລາຍເຊັ່ນນີ້ ສົມຄວນທີ່ຈະບໍ່ໄດ້ຮັບຄໍາຕອບຫລື? ສົມຄວນທີ່ຊາຍຄົນນັ້ນ,
ຜູ້ທີ່ເວົ້າບໍ່ເຊົາ, ຈະໄດ້ຮັບຄວາມເຊື່ອຖືຫລື?[3]ສົມຄວນທີ່ການໂອ້ອວດຂອງເຈົ້າ ຈະເຮັດໃຫ້ຄົນອື່ນໆມິດງຽບເສຍຫລື? ແລະເມື່ອເຈົ້າເຍາະ-
ເຍີ້ຍຄໍາສອນຂອງພວກເຮົາ, ຈະບໍ່ມີຄົນໃດທີ່ເຮັດໃຫ້ເຈົ້າຮູ້ສຶກອັບອາຍບໍ?

[4]ເພາະເຈົ້າກ່າວຕໍ່ພຣະເຈົ້າວ່າ, 'ຄວາມເຊື່ອຂອງຂ້ານ້ອຍບໍຣິສຸດ, ແລະຂ້ານ້ອຍບໍ່ດີເລີຍໃນສາຍຕາຂອງພຣະອົງ.'[5]ແຕ່, ໂອ, ຂໍໃຫ້ພຣະເຈົ້າເວົ້າ
ແລະຊົງເປີດປາກຂອງພຣະອົງຕໍ່ສູ້ກັບເຈົ້າ;[6]ທີ່ພຣະອົງຈະຊົງສະແດງໃຫ້ເຫັນເຖິງຄວາມລີ້ລັບຂອງສະຕິປັນຍາ! ເພາະພຣະອົງຊົງຍິ່ງໃຫຍ່ໃນ
ຄວາມເຂົ້າໃຈ. ຂໍຊົງຮູ້ວ່າພຣະເຈົ້າຊົງເອີ້ນຮ້ອງຈາກເຈົ້າຫນ້ອຍກວ່າຄວາມຫລອກລວງອັນຊົ່ວຮ້າຍຂອງເຈົ້າອີກ.
[7]ເຈົ້າສາມາດເຂົ້າໃຈພຣະເຈົ້າໄດ້ດ້ວຍການສະແຫວງຫາພຣະອົງຢ່າງນັ້ນຫລື? ທ່ານສາມາດເຂົ້າໃຈອົງຜູ້ມີຣິດທານຸພາບໄດ້
ຢ່າງຄົບຖ້ວນຢ່າງນັ້ນຫລື?[8]ເລື່ອງລາວນີ້ ກໍສູງເຫນືອຟ້າສະຫວັນ; ເຈົ້າສາມາດເຮັດສິ່ງໃດໄດ້ຫລື? ມັນເລິກກວ່າແດນຄົນຕາຍ;
ເຈົ້າສາມາດຮູ້ໄດ້ຢ່າງໃດຫລື?[9]ວັດແທກຂະຫນາດຂອງມັນກໍຍາວກວ່າແຜ່ນດິນໂລກ, ແລະມັນກວ້າງກ່ວາທ້ອງທະເລ.
[10]ຖ້າພຣະອົງໄດ້ຜ່ານໄປ ແລະຊົງປິດປາກໃຜຄົນຫນຶ່ງ, ຖ້າພຣະອົງຊົງເອີ້ນໃຜຄົນຫນຶ່ງ ເພື່ອພິພາກສາ, ແລ້ວໃຜຈະທີ່ສາມາດຂັດຂວາງພຣະ-
ອົງໄດ້?[11]ເພາະພຣະອົງຊົງຮູ້ຈັກຄົນຫລອກລວງ; ເມື່ອພຣະອົງຊົງໄດ້ເຫັນຄວາມຊົ່ວຮ້າຍ, ພຣະອົງຈະບໍ່ຊົງສັງເກດຢ່າງນັ້ນຫລື?[12]ແຕ່
ຄົນໂງ່ຍ່ອມບໍ່ມີຄວາມເຂົ້າໃຈ; ພວກເຂົາຈະຮັບມັນ ກໍຕໍ່ເມື່ອລາປ່າຕົວຫນຶ່ງເກີດລູກອອກມາເປັນມະນຸດ.
[13]ແຕ່ສົມມຸດວ່າ ເຈົ້າໄດ້ເຮັດໃຫ້ຫົວໃຈຂອງເຈົ້າທ່ຽງທັມ ແລະໄດ້ຢຽດມືຂອງເຈົ້າອອກໄປຫາພຣະອົງ;[14]ສົມມຸດວ່າ ຄວາມຊົ່ວຮ້າຍຢູ່ໃນມືຂອງ
ເຈົ້າ, ແຕ່ເຈົ້າໄດ້ວາງມັນໄວ້ຫ່າງໄກຈາກຕົວເຈົ້າ, ແລະບໍ່ຍອມໃຫ້ຄວາມບໍ່ຊອບທັມອາໄສຢູ່ໃນເຕັນທັງຫລາຍຂອງເຈົ້າ.
[15]ແລ້ວເຈົ້າຈະຖືກເຮັດໃຫ້ເງີຍຫນ້າຂຶ້ນໂດຍປາສະຈາກສັນຍານຂອງຄວາມອັບອາຍຢ່າງແນ່ນອນ, ທີ່ຈິງແລ້ວ, ເຈົ້າຈະຖືກເຮັດໃຫ້ຫມັ້ນຄົງ
ແລະບໍ່ຕ້ອງຢ້ານກົວສິ່ງໃດ.[16]ເຈົ້າຈະລືມຄວາມທຸກຍາກຂອງເຈົ້າ; ເຈົ້າຈະຈົດຈໍາໄດ້ພຽງແຕ່ເຫມືອນນໍ້າທີ່ໄດ້ໄຫລຜ່ານໄປ.[17]ແລ້ວຊີວິດຂອງເຈົ້າ
ຈະສ່ອງສະຫວ່າງຍິ່ງກວ່າເວລາກາງເວັນ, ເຖິງແມ່ນວ່າມີຄວາມມືດມິດ, ແຕ່ມັນຈະເປັນເຫມືອນເວລາຕອນເຊົ້າ.
[18]ແລະເຈົ້າຈະໄດ້ຮັບການເຮັດໃຫ້ຫມັ້ນຄົງປອດພັຍເພາະມີຄວາມຫວັງ; ແທ້ຈິງແລ້ວ, ທ່ານຈະພົບກັບຄວາມປອດພັຍກ່ຽວກັບຕົວຂອງເຈົ້າ
ແລະຈະໄດ້ນອນພັກສະຫງົບໃນຄວາມປອດພັຍ.[19]ເຈົ້າຈະນອນລົງໃນການພັກສະຫງົບດ້ວຍ, ແລະບໍ່ມີໃຜຈະເຮັດໃຫ້ເຈົ້າຢ້ານກົວໄດ້;
ຄວາມຈິງຄື, ຄົນເປັນຈໍານວນຫລາຍຈະສະແຫວງຫາຄວາມເພິ່ງພໍໃຈຈາກເຈົ້າ.
[20]ແຕ່ວ່າດວງຕາທັງຫລາຍຂອງຄົນຊົ່ວຮ້າຍຈະຜິດຫວັງ; ພວກເຂົາຈະບໍ່ມີທາງຫນີພົ້ນໄດ້; ຄວາມຫວັງດຽວຂອງພວກເຂົາກໍຈະ
ເຫມືອນລົມຫາຍໃຈສຸດທ້າຍຂອງຊີວິດເທົ່ານັ້ນ."


generated on Tue Jun 17 19:01:42 2025

12 [1]ແລ້ວໂຢບຈຶ່ງໄດ້ຕອບ ແລະເວົ້າວ່າ,[2]ບໍ່ຕ້ອງສົງໃສເລີຍວ່າເຈົ້າເປັນຄົນທີ່ມີສະຕິປັນຍາຈະຕາຍໄປພ້ອມກັບເຈົ້າ.[3]ແຕ່ຂ້ອຍກໍມີຄວາມເຂົ້າໃຈ
ຄືກັນກັບເຈົ້າ; ຂ້ອຍບໍ່ດີກວ່າເຈົ້າ. ທີ່ຈິງແລ້ວ, ໃນເລື່ອງສິ່ງຕ່າງໆເຫລົ່ານີ້ແມ່ນບໍ?

[4]ຂ້ານ້ອຍເປັນບາງສິ່ງທີ່ມີໄວ້ ເພື່ອເພື່ອນບ້ານຫົວເຍາະເຍີ້ຍຂ້ານ້ອຍ—ຂ້ານ້ອຍ, ເປັນຄົນທີ່ໄດ້ຮ້ອງທູນພຣະເຈົ້າ ແລະພຣະອົງໄດ້ຕອບ!
ຂ້ານ້ອຍ, ເປັນຄົນດີຮອບຄອບອັນຊອບທັມ ແລະບໍ່ມີຂໍ້ບົກພ່ອງ— ບັດນີ້ ຂ້ານ້ອຍເປັນຄົນທີ່ຖືກຫົວຂວັນ.[5]ໃນຄວາມຄິດຂອງບາງຄົນຜູ້ທີ່ຢູ່ຢ່າງ
ສະບາຍ ກໍມີຄຳຫມິ່ນປະຫມາດ, ສຳລັບຄົນທີ່ມີເຄາະຮ້າຍ; ເຂົາຄິດໃນສິ່ງທີ່ນຳເຄາະຮ້າຍມາໃຫ້ແກ່ຄົນເຫລົ່ານັ້ນ ທີ່
ຕີນກຳລັງມື່ນລົ້ມຫລາຍຍິ່ງຂຶ້ນ.[6]ເຕັນທັງຫລາຍຂອງພວກໂຈນກໍຈະເຣີນຮັ່ງມີ, ແລະຄົນເຫລົ່ານັ້ນທີ່ຍົ່ວະເຍົ້າພຣະເຈົ້າກໍຮູ້ສຶກຫມັ້ນຄົງ;
ມືທັງຫລາຍຂອງພວກເຂົາເປັນພະຂອງພວກເຂົາ.
[7]ແຕ່ເວລານີ້ ຂໍຖາມສັດຮ້າຍທັງຫລາຍ ແລະພວກມັນຈະສອນເຈົ້າ; ຖາມບັນດານົກໃນທ້ອງຟ້າເບິ່ງ, ແລະພວກມັນຈະບອກເຈົ້າ[8]ຫລືເວົ້າກັບ
ແຜ່ນດິນໂລກ ແລະ ມັນຈະສອນເຈົ້າ; ແລະ ປາໃນທະເລຈະປະກາດແກ່ເຈົ້າ.
[9]ສັດຕົວໃດໃນທ່າມສິ່ງທັງຫມົດເຫລົ່ານີ້ ທີ່ບໍ່ຮູ້ວ່າມືຂອງພຣະຢາເວເອງໄດ້ເຮັດສິ່ງນີ້ບໍ?[10]ໃນມືຂອງພຣະອົງ ຄືຊີວິດຂອງທຸກສິ່ງທີ່ມີຊີວິດຢູ່
ແລະລົມຫາຍໃຈຂອງມວນມະນຸດທັງຫມົດ.
[11]ຫູບໍ່ໄດ້ຊີມຖ້ອຍຄຳຕ່າງໆ ເຫມືອນກັບເພດານຊີມຣົດອາຫານບໍ່ແມ່ນຫລື?[12]ຜູ້ຄົນທີ່ມີອາຍຸພ້ອມກັບສະຕິປັນຍາ;
ວັນທັງຫລາຍກໍຄືຄວາມເຂົ້າໃຈ.
[13]ພຣະສະຕິປັນຍາ ແລະ ຣິດທານຸພາບຢູ່ກັບພຣະເຈົ້າ; ພຣະອົງມີຄຳແນະນຳ ແລະ ຄວາມເຂົ້າໃຈ.[14]ເບິ່ງແມ, ພຣະອົງໄດ້ມ້າງທຳລາຍ, ແລະ
ບໍ່ສາມາດສ້າງຂຶ້ນໃຫມ່ໄດ້; ຖ້າພຣະອົງໄດ້ກັກຂັງໃຜບາງຄົນ, ກໍບໍ່ມີຜູ້ໃດສາມາດປ່ອຍຕົວໄດ້.[15]ເບິ່ງແມ, ຖ້າພຣະອົງຊົງກັກນ້ຳເອົາໄວ້,
ພວກມັນກໍຈະເຫືອດແຫ້ງ; ແລະ ຖ້າພຣະອົງຊົງສົ່ງພວກມັນອອກໄປ, ພວກມັນກໍຈະຖ້ວມແຜ່ນດິນ.
[16]ພຣະອົງສະເດັດມາພ້ອມກັບຣິດທານຸພາບ ແລະພຣະສະຕິປັນຍາ; ທັງຄົນທີ່ຖືກຫລອກ ແລະຄົນທີ່ຫລອກລວງ ກໍຢູ່ໃນອຳນາດຂອງພຣະອົງ.
[17]ພຣະອົງຊົງໄດ້ນຳທີ່ປຶກສາໄປຕົວເປົ່າໃນຄວາມໂສກເສົ້າ; ແລະພຣະອົງຊົງໄດ້ກະທຳຜູ້ພິພາກສາໄປສູ່ການເປັນຄົນໂງ່ຈ້າ.[18]ພຣະອົງຊົງໄດ້
ປົດໂສ້ສິດອຳນາດຂອງບັນດາກະສັດທັງຫລາຍ; ພຣະອົງຊົງເອົາຜ້າຄາດແອວຂອງພວກເຂົາ.
[19]ພຣະອົງຊົງໄດ້ນຳໃຫ້ພວກປະໂລຫິດໄປຕົວເປົ່າໃນຄວາມໂສກເສົ້າ ແລະຊົງໄດ້ລົ້ມຜູ້ມີກຳລັງເສຍ.[20]ພຣະອົງຊົງກຳຈັດຄຳ
ເວົ້າຂອງຄົນເຫລົ່ານັ້ນທີ່ໄດ້ຮັບຄວາມໄວ້ວາງໃຈ ແລະເອົາຄວາມເຂົ້າໃຈອອກໄປຈາກພວກຜູ້ໃຫ່ຍ.[21]ພຣະອົງໄດ້ຖອກຄວາມອັບອາຍເທິງບັນດາ
ເຈົ້າຊາຍ ແລະໄດ້ກະທຳໃຫ້ຜູ້ທີ່ແຂງແຮງອ່ອນກຳລັງ.
[22]ພຣະອົງຊົງສຳແດງສິ່ງລ້ຳເລິກຕ່າງໆຈາກຄວາມມືດ ແລະຊົງໄດ້ນຳເງົາມັດຈຸຣາດອອກມາສູ່ຄວາມສະຫວ່າງ.[23]ພຣະອົງຊົງໄດ້ກະທຳໃຫ້ປະ-
ຊາຊາດເຂັ້ມແຂງຂຶ້ນ, ແລະພຣະອົງຊົງໄດ້ທຳລາຍພວກເຂົາ; ພຣະອົງຊົງໄດ້ຂະຫຍາຍບັນດາປະຊາຊາດຕ່າງໆ, ແລະພຣະອົງຊົງໄດ້ນຳພວກ-
ເຂົາມາເຫມືອນກັບນັກໂທດດ້ວຍ.
[24]ພຣະອົງຊົງໄດ້ນຳຄວາມເຂົ້າໃຈອອກໄປ ຈາກບັນດາຜູ້ປົກຄອງປະຊາຊົນເທິງແຜ່ນດິນໂລກນີ້; ພຣະອົງໄດ້ກະທຳໃຫ້ພວກເຂົາພະເນຈອນໄປ
ໃນຖິ່ນແຫ້ງແລ້ງກັນດານ ຊຶ່ງບໍ່ມີຫົນທາງ.[25]ພວກເຂົາທັງຫລາຍງົມຢູ່ໃນຄວາມມືດ ປາສະຈາກຄວາມສະຫວ່າງ ແລະພຣະອົງໄດ້ເຮັດໃຫ້ພວກ-
ເຂົາໂຊເຊເຫມືອນກັບຄົນເມົາ.


generated on Tue Jun 17 19:01:42 2025

13 1ເບິ່ງແມ, ດວງຕາຂອງຂ້ອຍໄດ້ເຫັນສິ່ງທັງຫມົດນີ້ແລ້ວ, ແລະຫູຂອງຂ້ອຍໄດ້ຍິນ ແລະເຂົ້າໃຈເລື່ອງນີ້ແລ້ວ.2ສິ່ງໃດທີ່ເຈົ້າທັງຫລາຍຮູ້,
ຂ້ອຍກໍຮູ້ເຫມືອນກັນ; ຂ້ອຍບໍ່ໄດ້ດ້ອຍໄປກວ່າເຈົ້າເລີຍ.

3ແຕ່ຢ່າງໃດກໍຕາມ, ຂ້ານ້ອຍ ກໍຄວນທູນຕໍ່ອົງຜູ້ຊົງຣິດທານຸພາບ; ແລະຂ້ານ້ອຍປາຖະຫນາໃຫ້ເຫດຜົນຕໍ່ພຣະເຈົ້າ.4ແຕ່ສ່ວນເຈົ້າ
ຈະປ້າຍສີຄວາມຈິງດ້ວຍການຂີ້ຕົວະ; ພວກເຈົ້າທັງຫລາຍເປັນແພດທີ່ໃຊ້ບໍ່ໄດ້.5ໂອ, ພວກເຈົ້າຈະຍຶດຫມັ້ນໃນສັນຕິຂອງພວກເຈົ້າ! ນັ້ນຈະເປັນ
ສະຕິປັນຍາຂອງພວກເຈົ້າ.
6ບັດນີ້ ຂໍຟັງການຫາເຫດຜົນຂອງຂ້ອຍ; ຂໍຟັງຄຳອ້ອນວອນຂອງຮີມປາກຂອງຂ້ອຍ.7ພວກເຈົ້າທັງຫລາຍຈະເວົ້າຢ່າງຊົ່ວຮ້າຍເພື່ອພຣະເຈົ້າບໍ,
ແລະ ພວກເຈົ້າຈະເວົ້າຄວາມບໍ່ຈິງເພື່ອພຣະອົງຢ່າງນັ້ນບໍ?8ພວກເຈົ້າທັງຫລາຍຈະສະແດງຄວາມກະຣຸນາຕໍ່ພຣະອົງຈິງໆບໍ?
ພວກທ່ານຈະໂຕ້ຖຽງໃນສານໃນຖານະທະນາຍຄວາມ ເພື່ອພຣະເຈົ້າຈິງໆບໍ?
9ເມື່ອພຣະອົງຊົງໄດ້ຄົ້ນພົບພວກເຈົ້າ ມັນຈະມີຜົນດີແກ່ເຈົ້າບໍ ຫລື? ພວກເຈົ້າສາມາດຈະເຍາະເຍີ້ຍພຣະອົງໄດ້ເຫມືອນກັບທີ່ພວກເຈົ້າເຍາະ-
ເຍີ້ຍມະນຸດໄດ້ຢ່າງນັ້ນບໍ?10ພຣະອົງຈະໄດ້ລົງໂທດພວກເຈົ້າທັງຫລາຍຢ່າງແນ່ນອນ ຖ້າພວກເຈົ້າສະແດງຄວາມລຳອຽງຢ່າງລັບໆ.
11ຄວາມສະຫງ່າຣາສີຂອງພຣະອົງ ຈະບໍ່ເຮັດໃຫ້ພວກເຈົ້າຢ້ານກົວເລີຍບໍ? ຄວາມຫນ້າຢ້ານກົວຂອງພຣະອົງຈະບໍ່ຕົກລົງມາເຫນືອພວກເຈົ້າ
ເລີຍບໍ?12ຄຳກ່າວທັງຫລາຍທີ່ໂດດເດັ່ນຂອງພວກເຈົ້າ ເປັນພຽງສຸພາສິດທີ່ເຮັດຈາກຂີ້ເຖົ່າ;
ການປ້ອງກັນຂອງພວກເຈົ້າເປັນການປ້ອງກັນເຮັດມາຈາກດິນ.
13ຂໍຈົ່ງຍຶດຫມັ້ນໃນສັນຕິຂອງພວກເຈົ້າໄວ້, ປ່ອຍຂ້ອຍໄວ້ຕາມລຳພັງເຖີ້ນ, ເພື່ອຂ້ອຍຈະເວົ້າ, ປ່ອຍໃຫ້ແມ່ນຫຍັງຈະເກີດຂຶ້ນແກ່ຂ້ອຍ ກໍຂໍໃຫ້
ເກີດຖ້ອນ.14ຂ້ອຍຈະກັດກິນຊີ້ນຂອງຂ້ອຍເອງ; ຂ້ອຍຈະເອົາຊີວິດຝາກໄວ້ໃນມືຂອງຂ້ອຍ.15ເບິ່ງແມ, ພຣະອົງຊົງໄດ້ປະຫານຂ້ານ້ອຍເສຍ,
ຂ້ານ້ອຍຈະບໍ່ມີຄວາມຫວັງຫລົງເຫລືອອີກ; ໃນທີ່ສຸດ, ຂ້ານ້ອຍຈະປົກປ້ອງວິທີຂອງຂ້ານ້ອຍຕໍ່ຫນ້າພຣະອົງກໍບໍ່ໄດ້.
16ນີ້ຈະເປັນເຫດຜົນສຳລັບການພົ້ນຜິດຂອງຂ້ານ້ອຍ, ທີ່ຂ້ານ້ອຍບໍ່ໄດ້ມາຢູ່ຕໍ່ຫນ້າພຣະອົງເຫມືອນກັນຄົນຊອບທັມ.17ຂ້າແດ່ພຣະເຈົ້າ, ຂໍຊົງຟັງ
ຖ້ອຍຄຳຂອງຂ້ານ້ອຍ ດ້ວຍຄວາມເອົາໃຈໃສ່; ຂໍໃຫ້ຄຳປະກາດຂອງຂ້ານ້ອຍມາເຖິງຫູຂອງພຣະອົງ.
18ເບິ່ງແມເວລານີ້, ຂໍໂຜດເບິ່ງ ຂ້ານ້ອຍໄດ້ຕັ້ງການປ້ອງກັນຂອງຂ້ານ້ອຍ; ຂ້ານ້ອຍຮູ້ຂ້ານ້ອຍບໍລິສຸດ.19ໃຜນໍ
ຄວນຄົນທີ່ໂຕ້ຖຽງກັບຂ້ານ້ອຍໃນສານຫລື? ຖ້າຫາກພຣະອົງສະເດັດມາເພື່ອເຮັດສິ່ງນີ້, ແລະຖ້າຂ້ານ້ອຍໄດ້ຮັບການພິສູດວ່າຜິດແທ້,
ແລ້ວຂ້ານ້ອຍຈະມິດງຽບຢູ່ ແລະຍອມມອບຊີວິດຂອງຂ້ານ້ອຍ.
20ຂ້າແດ່ພຣະເຈົ້າ, ຂໍຊົງເຮັດພຽງສອງສິ່ງເພື່ອຂ້ານ້ອຍ, ແລ້ວຂ້ານ້ອຍຈະບໍ່ເຊື່ອງຕົວເອງຈາກຫນ້າຂອງພຣະອົງ.21ຂໍຈົ່ງຖອນ
ມືແຫ່ງການກົດຂີ່ຂອງພຣະອົງຈາກຂ້ານ້ອຍ, ແລະຂໍຊົງຢ່າປ່ອຍໃຫ້ການຄຸກຄາມຂອງພຣະອົງໃຫ້ຂ້ານ້ອຍຢ້ານກົວ.22ແລ້ວຂໍຊົງເອີ້ນຂ້ານ້ອຍ,
ແລ້ວຂ້ານ້ອຍຈະຂໍຕອບ; ຫລືປ່ອຍໃຫ້ຂ້ານ້ອຍທູນຂໍຕໍ່ພຣະອົງ, ແລະພຣະອົງໄດ້ຕອບແກ່ຂ້ານ້ອຍ.
23ບັນດາຄວາມຊົ່ວຊ້າ ແລະ ຄວາມຜິດບາບຂອງຂ້ານ້ອຍມີເທົ່າໃດຫລື? ຂໍໃຫ້ຂ້ານ້ອຍຮູ້ເຖິງການກະທຳຜິດ ແລະຄວາມບາບຂອງຂ້າ-
ນ້ອຍເຖີດ.24ເປັນຫຍັງພຣະອົງຈຶ່ງຊົງຫັນຫນ້າຂອງພຣະອົງຈາກຂ້ານ້ອຍ ແລະຊົງປະຕິບັດຕໍ່ຂ້ານ້ອຍເຫມືອນເປັນສັດຕຣູຂອງພຣະອົງ?25ພຣະອົງ
ຈະຂົ່ມເຫັງຂ້ານ້ອຍທີ່ເປັນເຫມືອນ ໃບໄມ້ທີ່ຖືກລົມພັດຫັກບໍ? ແລະພຣະອົງຈະໄລ່ຕິດຕາມຂ້ານ້ອຍທີ່ເປັນເຫມືອນເຟືອງແຫ້ງນີ້ບໍ?
26ເພາະພຣະອົງຊົງໄດ້ຈາຣຶກສິ່ງທີ່ຂົມຂື່ນຕ່າງໆ ເພື່ອຕໍ່ສູ້ຂ້ານ້ອຍ; ແລະພຣະອົງເຮັດໃຫ້ຂ້ານ້ອຍຮັບມໍຣະດົກຄວາມຊົ່ວຮ້າຍຂອງໄວ
ຫນຸ່ມຂອງຂ້ານ້ອຍຢູ່.27ພຣະອົງຊົງວາງຕີນຂອງຂ້ານ້ອຍໃນຫຸ້ນທັງຫລາຍ, ພຣະອົງໄດ້ເຝົ້າເບິ່ງທາງທັງຫລາຍຂອງຂ້ານ້ອຍຢ່າງໃກ້ຊິດ;
ພຣະອົງຊົງກວດແຜ່ນດິນທີ່ຕີນຂອງຂ້ານ້ອຍໄດ້ຍ່າງ.28ເຖິງແມ່ນວ່າ, ຂ້ານ້ອຍເປັນເຫມືອນສິ່ງເນົ່າເປື່ອຍທີ່ຕ້ອງຖິ້ມ,
ເປັນເຫມືອນຜ້າທີ່ຖືກໂຕມອດກັດກິນກໍຕາມ.

14 1ມະນຸດ, ທີ່ເກີດມາຈາກຜູ້ຍິງ, ຍ່ອມມີຊີວິດພຽງແຕ່ບໍ່ພໍເທົ່າໃດມື້ ແລະ ເຕັມໄປດ້ວຍຄວາມຫຍຸ້ງຍາກໃຈ. 2ລາວງອກອອກມາດິນ
ເຫມືອນກັບດອກໄມ້ດອກຫນຶ່ງ ແລະກໍຖືກຕັດໃຫ້ລົ້ມລົງ; ເຂົາຫນີໄປຄືເງົາ ແລະ ບໍ່ຢູ່ຕໍ່ໄປອີກ. 3ພຣະອົງໄດ້ເບິ່ງສິ່ງເຫລົ່ານີ້ບໍ? ພຣະອົງຊົງ
ນໍາຂ້ານ້ອຍເຂົ້າສູ່ການພິພາກສາຂອງພຣະອົງອີກບໍ?

4ໃຜສາມາດນໍາສິ່ງທີ່ສະອາດອອກມາຈາກບາງສິ່ງບໍ່ສະອາດໄດ້ຢ່າງໃດ? ບໍ່ມີໃຜເຮັດຫຍັງເລີຍ? 5ວັນທັງຫລາຍຂອງມະນຸດ ກໍຖືກກໍານົດໄວ້
ແລ້ວ. ຈໍານວນເດືອນທັງຫລາຍຂອງເຂົາກໍຢູ່ກັບພຣະອົງ; ພຣະອົງໄດ້ຊົງກໍານົດຂອບເຂດຂອງລາວ ວ່າລາວບໍ່ສາມາດຜ່ານໄປໄດ້. 6ຂໍຊົງໄດ້ຫັນ
ຫນ້າໄປຈາກລາວເພື່ອລາວຈະໄດ້ຢຸດພັກ, ເພື່ອລາວຈະໄດ້ຊົມຊື່ນໃນວັນຂອງລາວເຫມືອນກັບລູກຈ້າງຄົນຫນຶ່ງ ຖ້າຫາກລາວເຮັດໄດ້ເຊັ່ນນັ້ນ.
7ສິ່ງນັ້ນສາມາດເປັນຄວາມຫວັງໃຫ້ກັບຕົ້ນໄມ້ຫນຶ່ງ; ຖ້າຫາກມັນຖືກຕັດລົງ, ມັນກໍຈະແຕກຫນໍ່ຂຶ້ນອີກ, ເພື່ອຕົ້ນຫນໍ່ອ່ອນຂອງມັນຈະບໍ່ຫາຍໄປ.
8ເຖິງແມ່ນວ່າ ຮາກຂອງມັນໃນແຜ່ນດິນຈະເຖົ້າ, ແລະເຫງົ້າ ຂອງມັນຈະຕາຍໃນດິນ, 9ແຕ່ມັນໄດ້ກິນນ້ໍາພຽງຈັກເລັກນ້ອຍ, ມັນກໍຈະປົ່ງ ແລະ
ແຕກກິ່ງອອກເຫມືອນກັບຕົ້ນໄມ້ອ່ອນຕົ້ນຫນຶ່ງ.
10ແຕ່ມະນຸດທີ່ຕາຍ; ເຂົາກໍກາຍເປັນຄົນອ່ອນແອ; ແທ້ຈິງແລ້ວ, ມະນຸດສິ້ນລົມຫາຍໃຈ, ແລະເຂົາຢູ່ບ່ອນໃດ? 11ເຫມືອນນ້ໍາໃນທະເລສາບທີ່ແຫ້ງ
ໄປ, ແລະເຫມືອນກັບແມ່ນ້ໍາທີ່ບໍ່ມີນ້ໍາ ແລະ ກໍເຫືອດແຫ້ງ. 12ດັ່ງນັ້ນຄົນລົ້ມລົງ ແລະ ບໍ່ລຸກຂຶ້ນມາອີກ. ຈົນກວ່າທ້ອງຟ້າທັງຫລາຍບໍ່ມີອີກຕໍ່ໄປ,
ພວກເຂົາຈະບໍ່ຕື່ນຂຶ້ນ ຫລື ຖືກປຸກຈາກການນອນຫລັບຂອງພວກເຂົາ.
13ໂອ, ຫາກພຣະອົງໄດ້ເຊື່ອງຂ້ານ້ອຍໄວ້ໃນແດນຄົນຕາຍຈາກຄວາມຍາກລໍາບາກຕ່າງໆ, ແລະສິ່ງພຣະອົງຈະຊົງຮັກສາຂ້ານ້ອຍ
ໄວ້ໃນທີ່ສ່ວນຕົນຈົນກວ່າຄວາມໂກດຮ້າຍຂອງພຣະອົງພົ້ນໄປ, ທີ່ພຣະອົງຈະຕັ້ງກໍານົດເວລາໃຫ້ຂ້ານ້ອຍຢູ່ທີ່ນັ້ນ ແລະຈາກນັ້ນຈຶ່ງຊົງລະນຶກເຖິງ
ຂ້ານ້ອຍອີກ! 14ຖ້າມະນຸດຄົນຫນຶ່ງຕາຍແລ້ວ, ເຂົາຈະມີຊີວິດອີກບໍ? ຖ້າຫາກມີໄດ້, ຂ້ານ້ອຍກໍປາຖະຫນາທີ່ຈະຄອຍຖ້າຢູ່ຕະ-
ຫລອດໃນຊ່ວງເວລາອັນອ່ອນແອຂອງຂ້ານ້ອຍ ຈົນກວ່າການປົດປ່ອຍຂອງຂ້ານ້ອຍຈະມາເຖິງ.
15ພຣະອົງຈະຊົງໄດ້ເອີ້ນ, ແລະ ຂ້ານ້ອຍຈະທູນຕອບພຣະອົງ. ພຣະອົງຈະຊົງມີຄວາມປາຖະຫນາສໍາລັບການວາງແຜນແຫ່ງມືຂອງພຣະອົງ. 16
ພຣະອົງຈະຊົງນັບຈໍານວນ ແລະດູແລບາດກ້າວທັງຫມົດຂອງຂ້ານ້ອຍ; ພຣະອົງຈະບໍ່ຊົງໄດ້ຈ້ອງຈັບຜິດຕາມຄວາມບາບຂອງຂ້ານ້ອຍ.
17ການກະທໍາຜິດຂອງຂ້ານ້ອຍ ຈະຖືກໃສ່ໄວ້ໃນຖົງທີ່ປະທັບຕຣາໄວ້; ແລະພຣະອົງຈະປົກປິດຄວາມຊົ່ວຊ້າຂອງຂ້ານ້ອຍ.
18ເຖິງວ່າພູເຂົາທັງຫລາຍລົ້ມລົງ ແລະ ສະລາຍໄປ; ເຖິງວ່າກ້ອນຫີນທັງຫລາຍຖືກຍ້າຍໄປຈາກບ່ອນຂອງມັນ; 19ນ້ໍາທັງຫລາຍກັດເຊາະກ້ອນຫີນ
ໄປ; ນ້ໍາທີ່ຖ້ວມຊໍາລະລ້າງພັດເອົາຂີ້ຝຸ່ນອອກໄປຈາກແຜ່ນດິນໂລກ. ເຊັ່ນດຽວກັນກັບສິ່ງນີ້, ພຣະອົງຊົງທໍາລາຍຄວາມຫວັງທັງຫລາຍຂອງມະ-
ນຸດ.
20ພຣະອົງປ່ອຍລາວໃຫ້ພ່າຍແພ້ສະເຫມີ, ແລະ ເຂົາກໍລ່ວງລັບໄປ; ພຣະອົງຊົງໄດ້ປ່ຽນໃບຫນ້າຂອງເຂົາ ແລະ ໄດ້ສົ່ງເຂົາ
ອອກໄປສູ່ຄວາມຕາຍ. 21ຖ້າບັນດາລູກຊາຍຂອງເຂົາໄດ້ຮັບກຽດ; ແລະ ເຂົາກໍບໍ່ຮູ້; ແລະຖ້າພວກເຂົາຖືກເຮັດໃຫ້ຕົກຕໍ່າລົງ; ເຂົາບໍ່ຮູ້ບໍ່ເຫັນ.
22ເຂົາຮູ້ສຶກໄດ້ພຽງຄວາມເຈັບປວດໃນຮ່າງກາຍຂອງຕົນ, ແລະ ເຂົາໄດ້ແຕ່ຄ້ໍາຄວນກັບຕົວເອງເທົ່ານັ້ນ.

 generated on Tue Jun 17 19:01:42 2025

15 [1]ແລ້ວເອລີຟັດຊາວເຕມານໄດ້ຕອບ ແລະເວົ້າວ່າ,[2]"ຄວນທີ່ຄົນມີປັນຍາຈະຕອບດ້ວຍຄວາມຮູ້ທີ່ໄຮ້ປະໂຫຍດ ແລະຕື່ມເຕັມຕົວເອງດ້ວຍລົມ
ຕາວັນອອກບໍ?[3]ຄວນຫລືທີ່ລາວຈະໃຫ້ເຫດຜົນດ້ວຍການເວົ້າຈາອັນຫາປະໂຫຍດບໍ່ໄດ້
ໃນດ້ວຍຖ້ອຍຄຳທີ່ລາວບໍ່ສາມາດເຮັດໃຫ້ສິ່ງດີໃດໆເກີດຂຶ້ນໄດ້?

[4]ແທ້ຈິງແລ້ວ, ເຈົ້າເຄົາລົບພຣະເຈົ້ານ້ອຍລົງ; ເຈົ້າຄັດຄ້ານການອຸທິດຕໍ່ພຣະອົງ.[5]ເພາະຄວາມຊົ່ວຮ້າຍຂອງເຈົ້າ ສອນປາກຂອງເຈົ້າ; ເຈົ້າເລືອກ
ເອົາລີ້ນຂອງຄົນສະຫລາດແກມໂກງ.[6]ບໍ່ແມ່ນປາກຂອງຂ້ອຍ; ທີ່ຈິງແລ້ວ, ຮີມປາກຂອງເຈົ້າຕ່າງຫາກປັກປ້ຳເຈົ້າເອງ.
[7]ເຈົ້າເປັນມະນຸດຄົນທຳອິດທີ່ເກີດມາບໍ? ເຈົ້າໄດ້ເກີດຢູ່ກ່ອນໂນນພູທັງຫລາຍບໍ?[8]ເຈົ້າເຄີຍໄດ້ຟັງຄວາມຮູ້ອັນເລິກລັບຂອງພຣະເຈົ້າບໍ? ເຈົ້າຈຳກັດ
ສະຕິປັນຍາໄວ້ສະເພາະຕົວເຈົ້າບໍ?[9]ເຈົ້າຮູ້ຈັກຫຍັງແດ່ທີ່ເຮົາບໍ່ຮູ້ບໍ? ແມ່ນຫຍັງຄືສິ່ງທີ່ເຈົ້າເຂົ້າໃຈທີ່ພວກເຮົາບໍ່ເຂົ້າໃຈບໍ?
[10]ໃນພວກເຮົາທັງສອງຕ່າງກໍມີຜົມຫງອກ ແລະອາຍຸກໍຫລາຍຍິ່ງກວ່າພໍ່ຂອງເຈົ້າອີກ.[11]ການເລົ້າໂລມຂອງພຣະເຈົ້າຫນ້ອຍເກີນໄປບໍ,
ທີ່ໃຊ້ຄຳເວົ້າສຸພາບອ່ອນຫວານຕໍ່ເຈົ້ານັ້ນ?
[12]ເຫດໃດຫົວໃຈຂອງເຈົ້າຈຶ່ງນຳເຈົ້າອອກຫ່າງໄປ? ເປັນຫຍັງດວງຕາຂອງເຈົ້າຈຶ່ງພິບ,[13]ດັ່ງນັ້ນເຈົ້າຈຶ່ງຫັນຈິດວິນຍານຂອງເຈົ້າຕໍ່ສູ້ພຣະເຈົ້າ ແລະ
ກ່າວຖ້ອຍຄຳເຊັ່ນນັ້ນອອກມາຈາກປາກຂອງເຈົ້າ?.[14]ຄົນແບບໃດທີ່ເຂົາສົມຄວນໄດ້ຮັບການຊຳລະໃຫ້ສະອາດ? ຄົນແບບໃດທີ່ເກີດມາຈາກຜູ້-
ຍິງຄົນຫນຶ່ງທີ່ເຂົາສົມຄວນເປັນຄົນຊອບທັມຫລື?
[15]ເບິ່ງແມ, ພຣະເຈົ້າບໍ່ໄດ້ຊົງວາງໃຈ ແມ່ນແຕ່ຜູ້ບໍຣິສຸດທັງຫລາຍຂອງພຣະອົງ; ແທ້ຈິງແລ້ວ, ແລະທ້ອງຟ້າທັງຫລາຍ ກໍບໍ່ບໍຣິສຸດໃນສາຍຕາຂອງ
ພຣະອົງ.[16]ແລ້ວຄົນຫນຶ່ງທີ່ ຄວາມຊົ່ວຊ້າ ແລະເສື່ອມທັມ, ກໍຍິ່ງສະອາດຫນ້ອຍກວ່ານັ້ນເທົ່າໃດ ຄົນທີ່ດື່ມຊົ່ວຮ້າຍເຫມືອນນ້ຳດື່ມ!
[17]ຂ້ອຍຈະສະແດງແກ່ເຈົ້າເຫັນ; ຈົ່ງຟັງຂ້ອຍ; ຂ້ອຍຈະກ່າວໃຫ້ຟັງສິ່ງຕ່າງໆທີ່ຂ້ອຍໄດ້ເຄີຍເຫັນແກ່ເຈົ້າ,[18]ສິ່ງຕ່າງໆທີ່ບັນດາຄົນມີປັນຍາທີ່
ໄດ້ຮັບການຖ່າຍທອດມາກຈາກພໍ່ທັງຫລາຍຂອງພວກເຂົາ, ສິ່ງຕ່າງໆ ທີ່ບັນພະບຸຣຸດຂອງພວກເຂົາ ບໍ່ເຄີຍປິດບັງໄວ້.
[19]ທັງຫມົດນີ້ ຄືບັນດາບັນພະບຸຣຸດຂອງພວກເຂົາ, ຜູ້ດຽວທີ່ທີ່ໄດ້ຮັບມອບແຜ່ນດິນ, ແລະທີ່ບໍ່ມີຄົນແປກຫນ້າຜ່ານໄປທ່າມກາງພວກເຂົາ.[20]ຄົນຊົ່ວ
ຮ້າຍເຈັບປວດຕະຫລອດວັນເວລາຂອງພວກເຂົາ, ຈຳນວນປີທັງຫລາຍທີ່ຖືກເກັບໄວ້ ເພື່ອໃຫ້ຜູ້ກົດຂີ່ທຸກທໍຣະມານ.[21]ສຽງແຫ່ງຄວາມຢ້ານກົວ
ກໍຢູ່ໃນຫູຂອງພວກເຂົາ, ໃນຂະນະທີ່ເຂົາມີຄວາມຮຸ່ງເຮືອງ, ຜູ້ທຳລາຍຈະມາເຫນືອລາວ.
[22]ເຂົາບໍ່ຄິດວ່າເຂົາຈະຫັນອອກໄປຈາກຄວາມມືດ; ດາບກໍຄອຍຖ້າລາວຢູ່.[23]ເຂົາໄປສະຖານທີ່ຫລາກຫລາຍເພື່ອຫາອາຫານ, ເຂົາເວົ້າວ່າ,
'ມັນຢູ່ທີ່ໃດ?' ເຂົາຮູ້ວ່າວັນແຫ່ງຄວາມມືດນັ້ນຢູ່ພຽງແຕ່ເອື້ອມມື.[24]ຄວາມລຳບາກ ແລະຄວາມທຸກຈະເຮັດໃຫ້ເຂົາຢ້ານກົວ;
ພວກມັນມີອຳນາດໂຈມຕີເຂົາ, ເຫມືອນກັບກະສັດອົງຫນຶ່ງຕຽມພ້ອມແລ້ວສຳລັບການເຮັດສົງຄາມ.
[25]ເພາະເຂົາໄດ້ຢຽດມືຂອງຕົນອອກຕໍ່ສູ້ພຣະເຈົ້າ ແລະໄດ້ປະພຶດຢ່າງຍິ່ງຜະຫຍອງຕໍ່ຜູ້ຊົງຣິດທານຸພາບ,[26]ຄົນຊົ່ວຮ້າຍນີ້ແລ່ນເຂົ້າໃສ່ພຣະ-
ອົງດ້ວຍຄໍທີ່ຕັ້ງຊັນ, ພ້ອມກັບໂລ່ຫນາ.
[27]ນີ້ຄືຄວາມຈິງ, ເຖິງແມ່ນວ່າເຂົາໄດ້ປົກຄຸມຫນ້າຂອງຕົນດ້ວຍຄວາມອ້ວນຂອງຕົນແລ້ວ ແລະຮວບຮວມໄຂມັນມາໄວ້ທີ່ບັ້ນແອວຂອງພວກເຂົາ.
[28]ແລະໄດ້ໃຊ້ຊີວິດໃນເມືອງຮ້າງເປົ່າ; ໃນເຮືອນທັງຫລາຍທີ່ບໍ່ມີຄົນອາໄສຢູ່ດຽວນີ້ ແລະພ້ອມທີ່ຈະເປັນກອງຊາກຫັກພັງແລ້ວ.
[29]ເຂົາຈະບໍ່ຮັ່ງມີ; ຄວາມຮັ່ງມີຂອງລາວຈະບໍ່ຫມັ້ນຄົງຢູ່; ແມ່ນແຕ່ເງົາຂອງລາວ ກໍຈະບໍ່ຢູ່ຕະຫລອດໄປໃນແຜ່ນດິນໂລກນີ້.[30]ລາວ
ຈະບໍ່ແຍກອອກຈາກຄວາມມືດມິດ; ແປວໄຟອັນຫນຶ່ງຈະເຮັດໃຫ້ຫນໍ່ຂອງລາວແຫ້ງໄປ; ແລະໂດຍລົມຫາຍໃຈຈາກປາກຂອງພຣະເຈົ້າຈະ
ຕ້ອງຫາຍໄປ.
[31]ຢ່າປ່ອຍໃຫ້ລາວໄວ້ວາງໃຈໃນສິ່ງຕ່າງໆທີ່ສູນເສຍເປົ່າ, ການຫລອກລວງຕົວລາວເອງ; ເພາະການສູນເສຍເປົ່າ ຈະເປັນລາງວັນຂອງລາວ.
[32]ມັນຈະເກີດຂຶ້ນກ່ອນເວລາຕາຍຂອງລາວຈະມາເຖິງ; ແລະກິ່ງກ້ານຂອງລາວຈະບໍ່ຂຽວສົດ.[33]ລາວຈະຫລົ່ນເຫມືອນກັບຫມາກອະງຸ່ນທີ່ບໍ່ສຸກ;
ລາວຈະຖິ້ມດອກບານທັງຫລາຍຂອງລາວເຫມືອນຕົ້ນຫມາກກອກ.
[34]ເພາະວ່າເພື່ອນຂອງຄົນບໍ່ຊອບທັມນັ້ນຈະເປັນຫມັນ; ໄຟຈະເຜົາຜານເຕັນທີ່ຕິດສິນບົນຂອງພວກເຂົາ.[35]ພວກເຂົາຕັ້ງທ້ອງຄວາມຊົ່ວຮ້າຍ
ແລະເຮັດໃຫ້ກໍ່ເກີດຄວາມບໍ່ຊອບທັມ; ມົດລູກຂອງພວກເຂົາກໍຕຽມການຫລອກລວງ."

16 [1]ແລ້ວໂຢບໄດ້ຕອບ ແລະເວົ້າວ່າ,[2]“ຂ້ອຍເຄີຍໄດ້ຍິນສິ່ງຕ່າງໆນີ້ມາຫລາຍແລ້ວ; ເຈົ້າທຸກຄົນເປັນຜູ້ເລົ້າໂລມທີ່ຫນ້າສັງເວດທີ່ສຸດ.[3]ຖ້ອຍຄຳ
ລົມໆແລ້ງໆທັງຫລາຍຈະມີທີ່ຈົບສິ້ນເມື່ອໃດຫນໍ? ມີສິ່ງໃດຜິດປົກກະຕິ ພວກເຈົ້າທີ່ເຮັດໃຫ້ຕອບຢ່າງນີ້ບໍ?

[4]ຂ້ອຍສາມາດເວົ້າເຫມືອນພວກເຈົ້າທັງຫລາຍໄດ້ຄືກັນ, ຖ້າພວກເຈົ້າຢູ່ໃນທີ່ຂອງຂ້ອຍ. ຂ້ອຍສາມາດສະສົມ ແລະລວມຖ້ອຍຄຳຕ່າງໆ
ມາເພື່ອໂຈມຕີພວກເຈົ້າ ແລະສັ່ນຫົວຂອງຂ້ອຍເຍາະເຍີ້ຍເຈົ້າໄດ້.[5]ໂອ, ຂ້ອຍຈະຫນູນໃຈພວກເຈົ້າດ້ວຍປາກຂອງຂອງຂ້ອຍໄດ້ຢ່າງໃດ! ແລະ
ການປອບໂຍນຮີມປາກຂອງຂ້ອຍ ຈະລະງັບຄວາມເຈັບປວດຂອງເຈົ້າກໍໄດ້ດ້ວຍ!
[6]ຖ້າຂ້ານ້ອຍເວົ້າ, ຄວາມເຈັບປວດຂອງຂ້ານ້ອຍກໍບໍ່ລະງັບລົງ; ຖ້າຂ້ານ້ອຍມິດງຽບຢູ່, ຈະຊ່ວຍບັນເທົາຄວາມເຈັບປວດຂອງຂ້ານ້ອຍໄດ້ບໍ?[7]ແຕ່-
ວ່າດຽວນີ້, ຂ້າແດ່ພຣະເຈົ້າ, ພຣະອົງໄດ້ເຮັດໃຫ້ຂ້ານ້ອຍອ່ອນແຮງໄປ. ພຣະອົງໄດ້ເຮັດໃຫ້ຄອບຄົວຂອງຂ້ານ້ອຍໂສກເສົ້າ.[8]ພຣະອົງໄດ້
ເຮັດໃຫ້ຂ້ານ້ອຍແຫ້ງຫ່ຽວໄປ, ຊຶ່ງມັນເປັນພະຍານປັກປ້ຳຂ້ານ້ອຍ; ແລະຮ່າງກາຍທີ່ຈ່ອຍຜອມຂອງຂ້ານ້ອຍກໍລຸກຂຶ້ນປັກປ້ຳຂ້ານ້ອຍ, ແລະມັນ
ເປັນພະຍານຕໍ່ຕ້ານໃບຫນ້າຂອງຂ້ານ້ອຍ.
[9]ພຣະອົງໄດ້ຈີກຂ້ານ້ອຍດ້ວຍຫນາມແຫ່ງຄວາມໂກດຮ້າຍຂອງພຣະອົງ ແລະຊົງຂົບເຫງົ້າຂ້ານ້ອຍ ພຣະອົງໄດ້ຊົງບີບບີ້ຂ້ານ້ອຍດ້ວຍແຂ້ວ
ຂອງພຣະອົງ; ສັດຕຣູຂອງຂ້ານ້ອຍປີ້ນຕາຕໍ່ສູ້ຂ້ານ້ອຍ ໃນຂະນະທີ່ເຂົາຈີກຂ້ານ້ອຍເປັນຕ່ອນໆ.[10]ຜູ້ຄົນໄດ້ອ້າປາກໃສ່ຂ້ານ້ອຍ; ພວກເຂົາໄດ້ຕົບ
ແກ້ມປະຈານຂ້ານ້ອຍຢ່າງເສື່ອມເສຍ; ພວກເຂົາໄດ້ສຸມຫົວກັນປັກປ້ຳຂ້ານ້ອຍ.
[11]ພຣະເຈົ້າຊົງໄດ້ມອບຂ້ານ້ອຍໃຫ້ແກ່ຄົນອະທັມ ແລະຊົງໄດ້ໂຍນຂ້ານ້ອຍໄວ້ໃນມືຂອງຄົນຊົ່ວຮ້າຍ.[12]ຂ້ານ້ອຍໄດ້ເຄີຍຢູ່ສຸກສະບາຍ, ແຕ່ພຣະ-
ອົງຊົງໄດ້ທຳລາຍຂ້ານ້ອຍເສຍ. ແທ້ຈິງແລ້ວ, ພຣະອົງໄດ້ຊົງຊຸກຄໍຂ້ານ້ອຍ ແລະໄດ້ຊົງຟາດຂ້ານ້ອຍລົງເປັນຕ່ອນໆ; ພຣະອົງຊົງໄດ້ຕັ້ງຂ້ານ້ອຍ
ໃຫ້ເປັນເປົ້າຂອງພຣະອົງດ້ວຍ.
[13]ເຫລົ່ານັກຍິງທະນູຂອງພຣະອົງອ້ອມຂ້ານ້ອຍ; ພຣະອົງໄດ້ແທງແອວຂອງຂ້ານ້ອຍ ແລະບໍ່ຊົງໄດ້ສົງສານຂ້ານ້ອຍເລີຍ; ພຣະອົງໄດ້ຖອກນ້ຳບີ
ຂອງຂ້ານ້ອຍລົງເທິງດິນ.[14]ພຣະອົງໄດ້ຊົງຊົນກຳແພງຂອງຂ້ານ້ອຍຄັ້ງແລ້ວຄັ້ງອີກ; ພຣະອົງຊົງໄດ້ແລ່ນເຂົ້າໃສ່ຂ້ານ້ອຍເຫມືອນນັກຮົບຄົນຫນຶ່ງ.
[15]ຜິວຫນັງຂອງຂ້ານ້ອຍກໍຖືກຫຍິບເຫມືອນກະສອບ; ຂ້ານ້ອຍຖືກດັນເຂົ້າລົງໄປເຖິງພື້ນດິນ.[16]ໃບຫນ້າຂອງຂ້ານ້ອຍເປັນສີແດງດ້ວຍການຮ້ອງ-
ໄຫ້; ເປືອກຕາຂອງຂ້ານ້ອຍເປັນເງົາມັດຈຸຣາດ.[17]ເຖິງແມ່ນວ່າ ບໍ່ມີຄວາມຮຸນແຮງໃນມືຂອງຂ້ານ້ອຍ, ແລະຄຳອະທິຖານຂອງຂ້ານ້ອຍກໍບໍ່ຣິສຸດ.
[18]ແຜ່ນດິນໂລກເອີຍ, ຢ່າປິດບັງເລືອດຂອງຂ້ານ້ອຍເລີຍ; ຢ່າໃຫ້ສຽງຮ້ອງຂອງຂ້ານ້ອຍບໍ່ມີບ່ອນຢຸດພັກເຊົາເຖີດ.[19]ເບິ່ງແມ, ແມ່ນວ່າບັດນີ້, ພະຍານ
ຂອງຂ້ານ້ອຍກໍຢູ່ເທິງທ້ອງຟ້າ; ເຂົາຜູ້ຮັບຮອງຂ້ານ້ອຍກໍຢູ່ໃນທີ່ສູງ.
[20]ເພື່ອນທັງຫລາຍຂອງຂ້ານ້ອຍດູຫມິ່ນຂ້ານ້ອຍ, ແຕ່ດວງຕາຂອງຂ້ານ້ອຍຖອກນ້ຳຕາຕໍ່ພຣະເຈົ້າ.[21]ຂ້ານ້ອຍຮ້ອງຂໍໃຫ້
ຜູ້ເປັນພະຍານໃນທ້ອງຟ້ານັ້ນໂຕ້ຖຽງກັບພຣະເຈົ້າ ແທນຊາຍຄົນນີ້ ເຫມືອນທີ່ມະນຸດຄົນຫນຶ່ງເຮັດໃຫ້ກັບພື່ອນບ້ານຂອງເຂົາ.[22]ເພາະເມື່ອ
ຫລາຍປີຜ່ານໄປ, ຂ້ານ້ອຍຈະໄປຍັງສະຖານທີ່ໆຂ້ານ້ອຍຈະບໍ່ກັບມາອີກ.


generated on Tue Jun 17 19:01:42 2025

# 17

[1]ວິນຍານຂອງຂ້ານ້ອຍຖືກເຜົາຜານ, ແລະວັນທັງຫລາຍຂອງຂ້ານ້ອຍກໍຈົບລົງ; ຂຸມຝັງສົບກໍຕຽມພ້ອມສຳລັບຂ້ານ້ອຍແລ້ວ.[2]ແນ່ນອນເລີຍວ່າ
ຈະຕ້ອງມີຄົນທີ່ເຍາະເຍີ້ຍຂ້ານ້ອຍ; ດວງຕາຂອງຂ້ານ້ອຍ ຕ້ອງຈ້ອງເບິ່ງການນິນທາຂອງພວກເຂົາສະເໝີ.[3]ບັດນີ້, ຂໍຊົງສັນຍາ, ຂໍຊົງເປັນຜູ້ຄ້ຳ
ປະກັນເພື່ອຂ້ານ້ອຍດ້ວຍຕົວຂອງພຣະອົງເອງເຖີດ;  ໃຜອີກຢູ່ບ່ອນນັ້ນທີ່ຈະຊ່ວຍຂ້ານ້ອຍໄດ້ຫລື?

[4]ຂ້າແດ່ພຣະເຈົ້າ, ເພາະພຣະອົງໄດ້ຊົງປິດໃຈຂອງພວກເຂົາຈາກຄວາມເຂົ້າໃຈ; ສະນັ້ນ, ພຣະອົງຈະບໍ່ໄດ້ຍົກຍ້ອງພວກເຂົາເຫນືອຂ້ານ້ອຍ.
[5]ເຂົາຜູ້ປະນາມພວກເພື່ອນຂອງເຂົາ ເພື່ອເຫັນແກ່ລາງວັນ, ດວງຕາຂອງລູກຫລານຂອງພວກເຂົາຈະມືດມົວໄປ.
[6]ແດ່ພຣະອົງໄດ້ຊົງກະທຳໃຫ້ຂ້ານ້ອຍເປັນບ່ອນນິນທາຂອງຜູ້ຄົນ; ແລະພວກເຂົາຖົ່ມນ້ຳລາຍຫົດຫນ້າຂອງຂ້ານ້ອຍ.[7]ດວງຕາຂອງຂ້ານອຍໄດ້
ມືດມົວໄປດ້ວຍຄວາມທຸກໂສກ; ແລະອະໄວຍະວະໃນຮ່າງກາຍຂອງຂ້ານ້ອຍທັງຫມົດກໍຈ່ອຍບາງເຫມືອນກັບເງົາ.[8]ຄົນທີ່ສັດຊື່ທ່ຽງທັມ
ຈະຂາດສະຕິໄປເພາະສິ່ງນີ້; ແລະຄົນທີ່ບໍ່ມີຄວາມຜິດກໍຈະລຸກຂຶ້ນປັກປ້າຄົນໜ້າຊື່ໃຈຄົດທີ່ບໍ່ນັບຖືພຣະເຈົ້າ.
[9]ຄົນຊອບທັມຍັງຈະຍຶດຫມັ້ນຢູ່ກັບທາງຂອງຕົນ; ເຂົາຜູ້ທີ່ມີມືທີ່ສະອາດກໍຈະແຂງແຮງຫລາຍຂຶ້ນ ແລະຫລາຍຂຶ້ນ.[10]ແຕ່ສຳລັບພວກເຈົ້າທຸກຄົນ
ຈົ່ງມາດຽວນີ້; ຂ້ານ້ອຍຈະບໍ່ພົບຄົນທີ່ມີປັນຍາຈັກຄົນຫນຶ່ງໃນທ່າມກາງພວກເຈົ້າ.
[11]ວັນທັງຫລາຍຂອງຂ້ານ້ອຍກໍຜ່ານພົ້ນໄປ, ແຜນການທັງຫລາຍຂອງຂ້ານ້ອຍກໍກະຈັດກະຈາຍໄປ
ແລະທັງຄວາມປາຖະຫນາແຫ່ງຫົວໃຈຂອງຂ້ານ້ອຍດ້ວຍ.[12]ຜູ້ຄົນເຫລົ່ານັ້ນ, ຜູ້ເຍາະເຍີ້ຍເຫລົ່ານັ້ນ, ປ່ຽນຄ່ຳຄືນໃຫ້ເປັນກາງເວັນ;
ຄວາມສະຫວ່າງຢູ່ໃກ້ຄວາມມືດມິດ.
[13]ຕັ້ງແຕ່ຂ້ານ້ອຍເຫັນແດນຄົນຕາຍວ່າເປັນເຫມືອນເຮືອນຂອງຂ້ານ້ອຍ; ຂ້ານ້ອຍໄດ້ກາງບ່ອນນອນຂອງຂ້ານ້ອຍໃນຄວາມມືດ.[14]ຕັ້ງແຕ່ຂ້ານ້ອຍ
ໄດ້ກ່າວຕໍ່ຂຸມເລິກວ່າ ‘ເຈົ້າເປັນພໍ່ຂອງຂ້ອຍ,’ ແລະເວົ້າກັບຫນອນວ່າ, ‘ເຈົ້າເປັນແມ່ຂອງຂ້ອຍ, ແລະເປັນເອື້ອຍຂອງຂ້ອຍ,’[15]ຄວາມຫວັງຂອງ
ຂ້ານ້ອຍຢູ່ທີ່ໃດ? ໃຜທີ່ສາມາດເຫັນໄດ້, ເພື່ອເປັນຄວາມຫວັງໃຫ້ແກ່ຂ້ານ້ອຍໄດ້?[16]ຄວາມຫວັງນັ້ນຈະລົງໄປທີ່ດ່ານປະຕູແດນຄົນ
ຕາຍກັບຂ້ານ້ອຍ ເມື່ອເຮົາກາຍເປັນຂີ້ຝຸ່ນບໍ?”


generated on Tue Jun 17 19:01:42 2025

18 [1]ແລ້ວບິນດັດ ຄົນຊູອາໄດ້ຕອບ ແລະເວົ້າວ່າ,[2]"ເມື່ອໃດທີ່ເຈົ້າຈະເຊົາເວົ້າ? ພິນິດເບິ່ງເຖີດ, ແລະຫລັງຈາກນັ້ນເຮົາຈຶ່ງຈະເວົ້າ.

[3]ເປັນຫຍັງພວກເຮົາຈຶ່ງຖືກນັບໃຫ້ເປັນເຫມືອນສັດຮ້າຍ; ເປັນຫຍັງພວກເຮົາຈຶ່ງກາຍເປັນຄົນໂງ່ໃນສາຍຕາຂອງເຈົ້າ?[4]ເຈົ້າຜູ້ຈີກຕົວຂອງເຈົ້າ
ດ້ວຍຄວາມຮ້າຍຂອງເຈົ້າ, ແຜ່ນດິນໂລກສົມຄວນຖືກປະຖິ້ມເພາະເຈົ້າ ຫລືກ້ອນຫີນທັງຫລາຍຍ້າຍອອກຈາກບ່ອນຂອງມັນບໍ?
[5]ແທ້ຈິງ, ຄວາມສະຫວ່າງຂອງຄົນຊົ່ວຮ້າຍຈະຖືກດັບມອດໄປ ແລະແປວໄຟຂອງເຂົາຈະບໍ່ສ່ອງແສງອີກ.[6]ຄວາມສະຫວ່າງຈະຖືກເຮັດໃຫ້
ມືດໄປໃນເຕັນຂອງເຂົາ; ແລະຕະກຽງຂອງເຂົາທີ່ຕັ້ງເຫນືອເຂົາຈະດັບມອດໄປ.
[7]ບາດກ້າວອັນແຂງແຮງຂອງເຂົາກໍຈະສັ້ນເຂົ້າ; ແລະແຜນການທັງຫລາຍຂອງເຂົາ ຈະເຮັດໃຫ້ເຂົາລົ້ມລົງ.[8]ເພາະເຂົາຈະຖືກໂຍນເຂົ້າ-
ໄປໃນບ້ວງແຮ້ວດ້ວຍຕີນຂອງເຂົາເອງ ແລະເຂົາຈະຍ່າງຢູ່ເທິງຂຸມກັບດັກ.
[9]ກັບດັກອັນຫນຶ່ງຈະຈັບສົ້ນຕີນຂອງເຂົາໄວ້; ບ້ວງແຮ້ວຈະມັດເຂົາໄວ້ໃຫ້ແຫນ້ນ.[10]ມີບ້ວງແຮ້ວເຊືອງຢູ່ໃນດິນໄວ້ດັກຈັບເຂົາ; ແລະບ້ວງມີແຮ້ວ
ເພື່ອຈັບເຂົາວາງຕາມທາງຂອງເຂົາ.[11]ສິ່ງຫນ້າຢ້ານຈະເຮັດໃຫ້ເຂົາຢ້ານທຸກດ້ານ; ພວກມັນຈະໄລ່ຕາມສົ້ນຕີນຂອງເຂົາ.
[12]ຄວາມມັ່ງຄັ່ງຂອງເຂົາຈະຫັນໄປສູ່ຄວາມຫິວໂຫຍ, ແລະພັຍພິບັດຈະພ້ອມທີ່ດ້ານຂ້າງຂອງເຂົາ.[13]ອະໄວຍະວະຕ່າງໆຂອງຮ່າງກາຍຂອງເຂົາ
ຈະຖືກກັດກິນ; ແທ້ຈິງແລ້ວ, ລູກກົກຂອງຄວາມຕາຍຈະກັດກິນອະໄວຍະວະທັງຫລາຍຂອງເຂົາ.
[14]ເຂົາຖືກຈີກຂາດຈາກຄວາມປອດພັຍແຫ່ງເຕັນຂອງລາວ ແລະເດີນຂະບວນໄປສູ່ກະສັດແຫ່ງຄວາມສະຫຍົດສະຫຍອງ.
[15]ຜູ້ຄົນທີ່ບໍ່ປາຖະຫນາຈະອາໃສຢູ່ໃນເຕັນຂອງເຂົາ ຫລັງຈາກທີ່ພວກເຂົາເຫັນວ່າ ມີກຳມະຖັນກະຈັດກະຈາຍໄປທົ່ວເຕັນຂອງເຂົາ.
[16]ຮາກຕ່າງໆຂອງເຂົາຈະຂາດນ້ຳທີ່ຢູ່ທາງລຸ່ມຈະແຫ້ງໄປ; ກິ່ງຂອງເຂົາທີ່ຢູ່ເທິງຂຶ້ນໄປຈະຖືກຕັດອອກ.
[17]ຄວາມຊົງຈຳຂອງເຂົາຈະຕາຍໄປຈາກແຜ່ນດິນໂລກ; ເຂົາຈະບໍ່ມີຊື່ຢູ່ໃນຖະຫນົນ.
[18]ເຂົາຈະຖືກຂັບໄລ່ຈາກຄວາມສະຫວ່າງເຂົ້າສູ່ຄວາມມືດ ແລະຈະຖືກຂັບໄລ່ອອກໄປຈາກແຜ່ນດິນໂລກນີ້.[19]ເຂົາຈະບໍ່ມີລູກ ຫລືຫລານ
ຊາຍທ່າມກາງຄົນຂອງເຂົາ, ຫລືບໍ່ມີຍາດມິດຄົງເຫລືອຢູ່ໃນບ່ອນທີ່ເຂົາເຄີຍຢູ່.[20]ວັນຫນຶ່ງຄົນເຫລົ່ານັ້ນທີ່ອາໄສຢູ່ທາງທິດຕາເວັນຕົກ
ຈະຖືກເຮັດໃຫ້ຂະຫຍອງຂ້ວນກັບສິ່ງທີ່ເກີດຂຶ້ນຕໍ່ເຂົາ; ຄົນເຫລົ່ານັ້ນທີ່ອາໄສຢູ່ທາງຕາເວັນອອກ ຈະຖືກເຮັດໃຫ້ສະທ້ານຢ້ານກົວໂດຍສິ່ງນີ້.
[21]ແນ່ນອນວ່ານັ້ນຄືບ້ານທັງຫລາຍຂອງຄົນບໍ່ຊອບທັມ, ສະຖານທີ່ທັງຫລາຍຂອງຄົນທີ່ບໍ່ຮູ້ຈັກພຣະເຈົ້າ."

# 19 [1]ແລ້ວໂຢບຈຶ່ງໄດ້ຕອບ ແລະເວົ້າວ່າ,[2]ແລະທຳລາຍຂ້ານ້ອຍໃຫ້ເປັນຕ່ອນໆ ດ້ວຍຄຳເວົ້າຂອງທ່ານອີກດົນປານໃດ?

[3]ທ່ານໄດ້ຫມິ່ນປະຫມາດຂ້ານ້ອຍຢ່າງນີ້ສິບຄັ້ງແລ້ວ; ແລະທ່ານໄດ້ດ່າຂ້ານ້ອຍຢ່າງບໍ່ລະອາຍເລີຍ
ຫລືທີ່ເຈົ້າໄດ້ປະຕິບັດຕໍ່ຂ້ານ້ອຍຢ່າງຫຍາບຄາຍນີ້.[4]ຖ້າຫາກເປັນຄວາມຈິງທີ່ຂ້ານ້ອຍໄດ້ເຮັດຜິດ,
ຄວາມຜິດຂອງຂ້ານ້ອຍກໍຍັງຄົງເປັນຄວາມກັງວົນຂອງຂ້ານ້ອຍເອງ.
[5]ຖ້າຫາກເປັນຄວາມຈິງທີ່ເຈົ້າຈະຍົກຕົວເອງຂຶ້ນເຫນືອຂ້ານ້ອຍ ແລະໃຊ້ຄວາມຍາກລຳບາກຂອງຂ້ານ້ອຍໂຈມຕີຂ້ານ້ອຍ.
[6]ແລ້ວເຈົ້າສົມຄວນຮູ້ວ່າພຣະເຈົ້າໄດ້ຊົງກະທຳສິ່ງທີ່ຜິດຕໍ່ຂ້ານ້ອຍ ແລະໄດ້ຊົງຈັບຂ້ານ້ອຍໄວ້ໃນບ້ວງແຮ້ວຂອງພຣະອົງ.
[7]ເບິ່ງແມ, ຂ້ານ້ອຍຮ້ອງຂໍວ່າ, "ຮຸນແຮງ!", ແຕ່ຂ້ານ້ອຍບໍ່ໄດ້ຮັບຄຳຕອບຂ້ານ້ອຍຮ້ອງຂໍຄວາມຊ່ວຍເຫລືອ ແຕ່ບໍ່ມີຄວາມຍຸຕິທັມເກີດຂຶ້ນ.
[8]ພຣະອົງຊົງໄດ້ປິດລ້ອມທາງຂອງຂ້ານ້ອຍເພື່ອວ່າຂ້ານ້ອຍຈະບໍ່ສາມາດຜ່ານໄປໄດ້, ແລະພຣະອົງໄດ້ຊົງຕັ້ງຄວາມມືດໃນວິທີຂອງຂ້ານ້ອຍ.
[9]ພຣະອົງໄດ້ຊົງປົດເປືອງສັກສີຂອງຂ້ານ້ອຍ ແລະພຣະອົງໄດ້ຊົງຖອດມົງກຸດອອກຈາກຫົວຂອງຂ້ານ້ອຍ.
[10]ພຣະອົງຊົງທຳລາຍຂ້ານ້ອຍໃນທຸກດ້ານ, ແລະຂ້ານ້ອຍໄດ້ຈາກໄປ; ພຣະອົງຊົງຮື້ຖອນຄວາມຫວັງຂອງຂ້ານ້ອຍ
ເຫມືອນກັບຖອນຕົ້ນໄມ້ຕົ້ນຫນຶ່ງ.[11]ພຣະເຈົ້າໄດ້ຊົງພິໂຣດຂ້ານ້ອຍຢ່າງຮ້າຍແຮງເພື່ອໂຈມຕີຂ້ານ້ອຍ; ພຣະອົງໄດ້ຊົງນັບວ່າຂ້ານ້ອຍເປັນ
ເຫມືອນຫນຶ່ງໃນບັນດາສັດຕຣູຜູ້ຮ້າຍກາດຂອງພຣະອົງ.[12]ກອງທະຫານຂອງພຣະອົງມາຮ່ວມກັນ; ພວກເຂົາສຸມກອງດິນເພື່ອໂຈມຕີຂ້ານ້ອຍ
ແລະຕັ້ງຄ້າຍປິດລ້ອມເຕັນຂອງຂ້ານ້ອຍໄວ້.
[13]ພຣະເຈົ້າຊົງເຮັດໃຫ້ພີ່ນ້ອງຂອງຂ້ານ້ອຍຫ່າງໄກຈາກຂ້ານ້ອຍ; ບັນດາຄົນຮູ້ຈັກຂ້ານ້ອຍກໍເລີ່ມຫັນຫນີຈາກຂ້ານ້ອຍ.[14]ພວກຍາດພີ່ນ້ອງ
ຂ້ານ້ອຍ ໄດ້ເຮັດໃຫ້ຂ້ານ້ອຍຜິດຫວັງ; ເພື່ອນຝູງສະຫນິດ ໄດ້ຫລົງລືມຂ້ານ້ອຍ;
[15]ຄົນເຫລົ່ານັ້ນ ທີ່ຄັ້ງຫນຶ່ງເຄີຍອາໄສເປັນແຂກໃນບ້ານຂອງຂ້ານ້ອຍ ແລະສາວໃຊ້ທັງຫມົດຂອງຂ້ານ້ອຍ ເຫັນຂ້ານ້ອຍເປັນຄົນແປກຫນ້າ;
ຂ້ານ້ອຍເຫມືອນຄົນຕ່າງດ້າວໃນສາຍຕາຂອງພວກເຂົາ.[16]ຂ້ານ້ອຍເອີ້ນທາດຂອງຂ້ານ້ອຍ,
ແຕ່ເຂົາບໍ່ຕອບຂ້ານ້ອຍເຖິງແມ່ນວ່າຂ້ານ້ອຍອ້ອນວອນເຂົາດ້ວຍຄຳເວົ້າຂອງຂ້ານ້ອຍກໍຕາມ.
[17]ລົມຫາຍໃຈຂອງຂ້ານ້ອຍ ເປັນທີ່ຫນ້າລັງກຽດຕໍ່ເມຍຂອງຂ້ານ້ອຍ; ຂ້ານ້ອຍເປັນທີ່ກຽດຊັງແມ່ນແຕ່
ແມ້ແຕ່ຄົນເຫລົ່ານັ້ນທີ່ໄດ້ເກີດມາຈາກທ້ອງແມ່ຂອງຂ້ານ້ອຍ.[18]ແມ້ແຕ່ເດັກ ຫນຸ່ມທັງຫລາຍ ກໍຍັງດູຫມິ່ນຂ້ານ້ອຍ; ຖ້າຂ້ານ້ອຍລຸກຂຶ້ນເວົ້າ,
ພວກເຂົາເວົ້າໂຈມຕີຂ້ານ້ອຍ,.[19]ຄົນເຫລົ່ານັ້ນ ທີ່ຂ້ານ້ອຍຮັກໄດ້ຫັນມາໂຈມຕີຂ້ານ້ອຍ.
[20]21 ກະດູກທັງຫລາຍຂອງຂ້ານ້ອຍຕິດກັບຫນັງ ແລະຊີ້ນຂອງຂ້ານ້ອຍ, ຂ້ານ້ອຍມີຊີວິດລອດພຽງຫນັງຫຸ້ມແຂ້ວຂອງຂ້ານ້ອຍເທົ່ານັ້ນ.
[21]ແລະຂໍຈົ່ງສົງສານຂ້ານ້ອຍເພື່ອນທັງຫລາຍຂອງຂ້ານ້ອຍ. ເພາະພຣະຫັດຂອງພຣະເຈົ້າໄດ້ຊົງແຕະຕ້ອງຂ້ານ້ອຍແລ້ວ.
[22]ເຫມືອນກັບວ່າເຈົ້າເປັນພຣະເຈົ້າລະ? ເປັນຫຍັງເຈົ້າຈຶ່ງບໍ່ພໍໃຈກັບການເຜົາຜານຊີ້ນຂອງຂ້ານ້ອຍ?
[23]ໂອ, ທີ່ຖ້ອຍຄຳທັງຫລາຍຂອງຂ້ານ້ອຍໄດ້ຖືກບັນທຶກເອົາໄວ້! ໂອ, ຖ້າພວກມັນໄດ້ຖືກບັນທຶກໄວ້ໃນຫນັງສືເຫລັ້ມຫນຶ່ງ![24]ໂອ, ດ້ວຍເຫລັກ
ແລະກົ່ວ ພວກມັນໄດ້ຖືກສະຫລັກໃນກ້ອນຫີນຊົ່ວນິຣັນດອນ!
[25]ແຕ່ສຳລັບຂ້ານ້ອຍແລ້ວ, ຂ້ານ້ອຍຮູ້ວ່າພຣະຜູ້ໄຖ່ຂ້ານ້ອຍ ຊົງມີຊີວິດຢູ່, ແລະພຣະອົງຈະຊົງຢືນຢູ່ເທິງແຜ່ນດິນໂລກໃນທີ່ສຸດ;
[26]ຫລັງຈາກທີ່ຜິວຫນັງຂອງຂ້ານ້ອຍ, ຄືຮ່າງກາຍນີ້, ຖືກທຳລາຍໄປແລ້ວ, ໃນຊີ້ນຫນັງຂອງຂ້ານ້ອຍ. ຂ້ານ້ອຍຈະເຫັນພຣະເຈົ້າ[27]ຂ້ານ້ອຍຈະ
ເຫັນພຣະເຈົ້າດ້ວຍຕາຂ້ານ້ອຍເອງ-ຄືຂ້ານ້ອຍ, ແລະບໍ່ແມ່ນຄົນອື່ນ. ຫົວໃຈຂອງຂ້ານ້ອຍແຕກສະຫລາຍພາຍໃນຂ້ານ້ອຍ.
[28]ຖ້າຫາກເຈົ້າເວົ້າວ່າ, 'ພວກເຮົາຈະຂົ່ມເຫັງເຂົາໄດ້ຢ່າງໃດ! ຮາກແຫ່ງຄວາມທຸກທັງຫລາຍຂອງເຂົາ ຝັງຢູ່ໃນຕົວເຂົາຕ່າງຫາກ.'
[29]ຢ່າງນັ້ນແລ້ວ ຈົ່ງຢ້ານກົວດາບເຖີດ, ເພາະ ພຣະພິໂຣດນຳມາຊຶ່ງການລົງໂທດດ້ວຍດາບ, ເພື່ອວ່າເຈົ້າຈະຮູ້ວ່າມີການພິພາກສາ."

 generated on Tue Jun 17 19:01:42 2025

20 [1]ແລ້ວໂຊຟາຊາວນາອາມາໄດ້ຕອບ ແລະເວົ້າວ່າ, [2]“ເພາະຄວາມຄິດຂອງຂ້ານ້ອຍ ເຮັດໃຫ້ຂ້ານ້ອຍຕອບຄວາມຮີບ
ຮ້ອນເພາະຄວາມກັງວົນທີ່ຢູ່ພາຍໃນຂ້ານ້ອຍ. [3]ຂ້ານ້ອຍໄດ້ຟັງຄຳຕິຕຽນທີ່ຫມິ່ນປະຫມາດທີ່ບໍ່ໃຫ້ກຽດຂ້ານ້ອຍແລ້ວ,
ແຕ່ວິນຍານຫນຶ່ງຈາກຄວາມເຂົ້າໃຈຂອງຂ້ານ້ອຍຕອບຂ້ານ້ອຍ.

[4]ເຈົ້າບໍ່ຮູ້ຄວາມຈິງນີ້ຈາກຍຸກໂບຮານ ເມື່ອພຣະເຈົ້າຊົງວາງມະນຸດໄວ້ເທິງແຜ່ນດິນໂລກນີ້: [5]ທີ່ໄຊຊະນະຂອງຄົນຊົ່ວນັ້ນສັ້ນ, ແລະຄວາມ
ຍິນດີຂອງຄົນທີ່ບໍ່ນັບຖືພຣະເຈົ້າ ກໍຢູ່ພຽງຊົ່ວຂະນະຫນຶ່ງຫລື?
[6]ເຖິງແມ່ນວ່າ ຄວາມສູງຂອງລາວຂຶ້ນໄປເຖິງທ້ອງຟ້າທັງຫລາຍ ແລະຫົວຂອງເຂົາໄປເຖິງຫມູ່ເມກທັງຫລາຍ.
[7]ແຕ່ຄົນເຊັ່ນນີ້ຈະຈິບຫາຍໄປຢ່າງຖາວອນ ເຫມືອນກັບຫນ້າຂອງລາວເອງ; ຄົນເຫລົ່ານັ້ນທີ່ໄດ້ເບິ່ງເຫັນລາວຈະເວົ້າວ່າ, ‘ເຂົາຢູ່ທີ່ໃດບໍ?’
[8]ເຂົາຈະບິນໄປຄືຄວາມຝັນ ແລະຈະບໍ່ຖືກຄົ້ນພົບ, ອັນທີ່ຈິງແລ້ວ, ເຂົາຈະຖືກໄລ່ອອກໄປເຫມືອນກັບນິມິດຍາມຄ່ຳຄືນ. [9]ດວງຕາທີ່ໄດ້ເຫັນເຂົາຈະ
ບໍ່ເຫັນເຂົາອີກຕໍ່ໄປ; ສະຖານທີ່ຂອງເຂົາຈະບໍ່ເຫັນເຂົາອີກຕໍ່ໄປ.
[10]ລູກທັງຫລາຍຂອງເຂົາຈະຂໍໂທດຕໍ່ຄົນຍາກຈົນ; ມືທັງສອງຂອງເຂົາ ຈະຕ້ອງມອບຄວາມມັ່ງຄັ່ງຂອງເຂົາຄືນໃຫ້. [11]ກະດູກທັງຫລາຍຂອງເຂົາຈະ
ເຕັມໄປດ້ວຍກຳລັງຂອງຄົນຫນຸ່ມ, ແຕ່ມັນຈະນອນລົງໄປພ້ອມກັບເຂົາໃນຂີ້ຝຸ່ນດິນ.
[12]ເຖິງແມ່ນວ່າ ຄວາມຊົ່ວຮ້າຍຈະຫວານຢູ່ໃນປາກຂອງເຂົາ, ເຖິງແມ່ນວ່າ ລາວເຊື່ອງມັນໄວ້ກ້ອງລີ້ນຂອງລາວ,
[13]ເຖິງແມ່ນວ່າລາວຍຶດມັນໄວ້ທີ່ນັ້ນ ແລະບໍ່ຍອມປ່ອຍມັນໄປ, ແຕ່ອົມໄວ້ໃນປາກຂອງເຂົາ- [14]ອາຫານໃນລຳໄສ້ຂອງລາວຈະກາຍເປັນຮົດຂົມ;
ມັນກາຍເປັນພິດ ເຫມືອນພິດງູຢູ່ພາຍໃນລາວ.
[15]ລາວກືນຄວາມມັ່ງຄັ່ງລົງໄປ, ແຕ່ລາວຈະຮາກມັນອອກມາອີກ; ພຣະເຈົ້າຈະໂຍນພວກມັນອອກມາຈາກທ້ອງຂອງລາວ. [16]ລາວຈະດູດພິດຂອງງູ;
ລີ້ນຂອງງູທີ່ມີພິດຮ້າຍຈະຂ້າລາວເສຍ.
[17]ລາວຈະບໍ່ມີຄວາມສຸກກັບສາຍນ້ຳຕ່າງໆ, ກະແສນ້ຳແຮງແຫ່ງນ້ຳເຜິ້ງ ແລະເນີຍແຫລວ. [18]ລາວຈະສົ່ງຄືນ
ຫມາກໄມ້ຈາກການເຮັດວຽກຫນັກຂອງລາວ ແລະຈະບໍ່ສາມາດກິນມັນໄດ້.
ລາວຈະບໍ່ມີຄວາມສຸກກັບຄວາມມັ່ງຄັ່ງທີ່ຫາມາຈາກການຄ້າຂອງລາວ. [19]ເພາະລາວໄດ້ບຽດບຽນ ແລະປະຖິ້ມຄົນຍາກຈົນ;
ລາວໄດ້ໃຊ້ຄວາມຮຸນແຮງ ເພື່ອຍຶດເຮືອນທັງຫລາຍທີ່ລາວບໍ່ໄດ້ສ້າງ.
[20]ເພາະລາວບໍ່ຮູ້ຈັກພຶງພໍໃຈກັບຕົວເອງ, ລາວຈະບໍ່ສາມາດເກັບຮັກສາສິ່ງໃດທີ່ລາວພໍໃຈເອົາໄວ້. [21]ເຫດສະນັ້ນ ບໍ່-
ມີສິ່ງໃດຫລົງເຫລືອທີ່ລາວບໍ່ໄດ້ຜານ; ດັ່ງນັ້ນຄວາມຮຸ່ງເຮືອງຂອງລາວຈະບໍ່ຄົງຢູ່. [22]ໃນຄວາມອຸດົມສົມບູນແຫ່ງຄວາມມັ່ງຄັ່ງຂອງລາວ;
ລາວຈະລົ້ມລົງໃນຄວາມທຸກຍາກ ມືຂອງທຸກຄົນທີ່ຢູ່ໃນຄວາມຍາກຈົນຈະມາໂຈມຕີລາວ.
[23]ເມື່ອລາວຈະເຕີມທ້ອງຂອງເຂົາໃຫ້ເຕັມ, ພຣະເຈົ້າຈະໄດ້ສົ່ງຄວາມອຳມະຫິດແຫ່ງພຣະພິໂຣດມາເຖິງເຂົາ;
ພຣະເຈົ້າຈະຖອກຝົນແຫ່ງພຣະພິໂຣດລົງມາເຖິງເຂົາໃນຂະນະທີ່ເຂົາກຳລັງກິນອາຫານຢູ່. [24]ເຖິງແມ່ນວ່າ ຊາຍຄົນນັ້ນຈະຫນີໄປຈາກອາວຸດ
ເຫລັກ, ຄັນທະນູທອງເຫລືອງຈະຍິງເຂົາ. [25]ລູກທະນູຈະແທງຫລັງຂອງເຂົາ ແລະຈະທະລຸອອກມາ; ອັນທີ່ຈິງ, ຈຸດທີ່ຄົມແຫລມຈະອອກມາຈາກ
ຕັບຂອງເຂົາ; ຄວາມຫນ້າຢ້ານມາເຖິງເຂົາ.
[26]ຄວາມມືດສະຫນິດຕຽມໄວ້ສຳລັບຊັບສົມບັດຂອງລາວ; ໄຟທີ່ບໍ່ຕ້ອງເປົ່າຈະເຜົາຜານລາວ; ມັນຈະເຜົາຜານສິ່ງທີ່ຫລົງເຫລືອຢູ່ໃນເຕັນຂອງ
ລາວ. [27]ຟ້າສະຫວັນຈະສະແດງຄວາມຊົ່ວຊ້າຂອງລາວ ແລະແຜ່ນດິນໂລກຈະລຸກຂຶ້ນຕໍ່ສູ້ລາວໃນຖານະພະຍານຜູ້ຫນຶ່ງ.
[28]ຄວາມມັ່ງຄັ່ງແຫ່ງເຮືອນຂອງລາວ ຈະຖືກກວາດໄປ; ສິນຄ້າຂອງລາວຈະໄຫລອອກໄປໃນວັນແຫ່ງພຣະພິໂຣດຂອງພຣະເຈົ້າ. [29]ນີ້ເປັນ
ຊະຕາຂອງຄົນຊົ່ວຮ້າຍຈາກພຣະເຈົ້າ, ມໍຣະດົກທີ່ສຳຮອງໄວ້ສຳລັບລາວໂດຍພຣະເຈົ້າ.”

 generated on Tue Jun 17 19:01:42 2025

21 1ແລ້ວໂຢບໄດ້ຕອບ ແລະເວົ້າວ່າ,2“ຂໍຈົ່ງຟັງຖ້ອຍຄຳຂອງຂ້ານ້ອຍໃຫ້ດີ ແລະຂໍໃຫ້ຄຳເວົ້ານີ້ເປັນການປອບໂຍນໃຈທີ່
ຂ້ານ້ອຍມອບໃຫ້ແກ່ຂ້ານ້ອຍເຖີດ.3ຕໍ່ກອນກັບຂ້ານ້ອຍເຖີດ, ແລະຂ້ານ້ອຍຈະເວົ້າດ້ວຍເຊັ່ນກັນ; ຫລັງຈາກທີ່ຂ້ານ້ອຍເວົ້າແລ້ວ, ກໍຈົ່ງເຍາະເຍີ້ຍ
ຕໍ່ໄປສາ.

4ສ່ວນຂ້ານ້ອຍແລ້ວ, ຂ້ານ້ອຍໄດ້ຈົ່ມວ່າບຸກຄົນຫນຶ່ງຫລື? ເປັນຫຍັງຂ້ານ້ອຍຈຶ່ງບໍ່ສົມຄວນທີ່ຈະອົດທົນ?5ຈົ່ງເບິ່ງຂ້ານ້ອຍ ແລະຈົ່ງປະຫລາດໃຈ
ສາ ແລະຈົ່ງເອົາມືຂອງເຈົ້າປິດປາກຂອງເຈົ້າໄວ້.6ເມື່ອຂ້ານ້ອຍລະນຶກເຖິງການທົນທຸກຂອງຂ້ານ້ອຍ, ຂ້ານ້ອຍກໍປະຫລາດໃຈແລ້ວ, ແລະ
ຮ່າງກາຍຂອງຂ້ານ້ອຍກໍສັ່ນສະທ້ານໄປຫມົດ.
7ເປັນຫຍັງຄົນຊົ່ວຈຶ່ງມີຊີວິດຢູ່ຕໍ່ໄປ, ຈົນເຖິງເຖົ້າແກ່ ແລະມີພະລັງແຂງແຮງຂຶ້ນ?8ເຊື້ອສາຍທັງຫລາຍຂອງພວກເຂົາໄດ້ຮັບການຕັ້ງຫມັ້ນ-
ຄົງພ້ອມກັບພວກເຂົາຢູ່ໃນສາຍຕາຂອງພວກເຂົາ, ແລະພົງພັນຂອງພວກເຂົາໄດ້ຮັບການກໍ່ຕັ້ງຕໍ່ຫນ້າຕໍ່ຕາພວກເຂົາ.9ເຮືອນທັງຫລາຍຂອງພວກ-
ເຂົາກໍປອດພັຍປາສະຈາກຄວາມຢ້ານກົວ; ແລະບໍ່ມີໄມ້ແສ້ຂອງພຣະເຈົ້າຢູ່ເທິງພວກເຂົາ.
10ງົວເຖິກຂອງພວກເຂົາຜະສົມພັນໄດ້; ມັນເຮັດໄດ້ສຳເລັດ; ແມ່ງົວຂອງພວກເຂົາອອກລູກ ແລະບໍ່ມີຫລຸລູກ.11ພວກເຂົາສົ່ງລູກນ້ອຍໆ
ຂອງພວກເຂົາອອກໄປຢູ່ຄືຝູງແບ້ແກະ ແລະບັນດາລູກຂອງພວກເຂົາກໍເຕັ້ນລຳ.12ພວກເຂົາຮ້ອງເພງດ້ວຍສຽງກອງ ແລະພິນຄູ່ ແລະປິຕິຍິນ-
ດີດ້ວຍສຽງດົນຕຣີຈາກຂຸ່ຍ.
13ພວກເຂົາໃຊ້ເວລາໃນວັນທັງຫລາຍຂອງພວກເຂົາກັບຄວາມຮຸ່ງເຮືອງ; ແລະພວກເຂົາລົງໄປທີ່ແດນຄົນຕາຍຢ່າງສະຫງົບ.14ພວກເຂົາຈຶ່ງທູນ
ພຣະເຈົ້າວ່າ, ‘ຂໍຊົງແຍກໄປຈາກພວກເຮົາ ພວກເຮົາບໍ່ປາຖະຫນາຄວາມຮູ້ໃດໆ ໃນທາງຂອງພຣະອົງ.15ສິ່ງໃດຄືຜູ້ຊົງມີຣິດອຳນາດ,
ທີ່ພວກເຮົາສົມຄວນນະມັດສະການພຣະອົງຫລື? ພວກເຮົາຈະໄດ້ຮັບຜົນປະໂຫຍດຫຍັງ ຖ້າຫາກພວກເຮົາອະທິຖານຕໍ່ພຣະອົງ?'
16ເບິ່ງແມ, ບໍ່ແມ່ນຄວາມຮຸ່ງເຮືອງຂອງພວກເຂົາທີ່ຢູ່ໃນກຳມືຂອງພວກເຂົາບໍ? ຂ້ານ້ອຍບໍ່ມີສິ່ງໃດທີ່ຈະຕ້ອງເຮັດກັບຄຳແນະນຳຂອງຄົນຊົ່ວ.
17ຫລາຍເທື່ອເທົ່າໃດທີ່ຕະກຽງຂອງຄົນຊົ່ວດັບມອດ, ຫລືທີ່ຄວາມຍາກລຳບາກມາເຖິງພວກເຂົາ? ຫລາຍເທື່ອເທົ່າໃດທີ່ມັນເກີດຂຶ້ນທີ່ພຣະເຈົ້າ
ເຮັດໃຫ້ພວກເຂົາໂສກເສົ້າດ້ວຍພຣະພິໂຣດຂອງພຣະອົງ?18ຫລາຍເທື່ອເທົ່າໃດທີ່ພວກເຂົາຕ້ອງກາຍເປັນຄືເຟືອງທ່າມກາງສາຍລົມພັດປິວ ຫລື
ເຫມືອນຂີ້ແກບທີ່ຖືກພາຍຸພັດໄປ?
19ເຈົ້າເວົ້າວ່າ, 'ພຣະເຈົ້າຊົງຍົກຄວາມຮັບຜິດຄົນຫນຶ່ງຂຶ້ນມາ ເພື່ອໃຫ້ບັນດາລູກຂອງພຣະອົງຊົດໃຊ້.' ໃຫ້ລາວຊົດໃຊ້ດ້ວຍຕົວເອງເຖີດ,
ເພື່ອວ່າລາວຈະຮູ້ຄວາມຮັບຜິດຂອງລາວ.20ໃນດວງຕາຂອງລາວເອງ ເຫັນຄວາມພິນາດຂອງລາວເອງ, ແລະໃຫ້ລາວດື່ມພຣະພິໂຣດອົງຊົງ
ຣິດທານຸພາບເຖີດ.21ເພາະສິ່ງໃດຈະເປັນການເອົາໃຈໃສ່ຄອບຄົວຂອງລາວ, ເມື່ອຈຳນວນເດືອນທັງຫລາຍຂອງລາວຖືກຕັດອອກຫລື?
22ມີຜູ້ໃດສາມາດສອນຄວາມຮູ້ໃຫ້ກັບພຣະເຈົ້າ ເນື່ອງຈາກ ພຣະອົງຊົງພິພາກສາ ແມ້ແຕ່ຄົນເຫລົ່ານັ້ນທີ່ຢູ່ສູງ?23ຊາຍຄົນຫນຶ່ງຕາຍ
ໃນຂະນະທີ່ກຳລັງຂອງລາວແຂງແຮງເຕັມທີ່, ງຽບສະຫງົບ ແລະສຸກສະບາຍຢ່າງເຕັມທີ່.24ຮ່າງກາຍຂອງລາວເຕັມໄປດ້ວຍນ້ຳນົມ ແລະ
ໄຂໃນກະດູກຂອງລາວກໍຊຸ່ມ ແລະມີສຸຂະພາບດີ.
25ຊາຍອີກຄົນຫນຶ່ງຕາຍດ້ວຍຈິດວິນຍານທີ່ຂົມຂື່ນ ຄືຄົນຫນຶ່ງທີ່ບໍ່ເຄີຍມີປະສົບການກັບສິ່ງດີໆ.26ພວກເຂົາລົ້ມຕົວນອນໃນຂີ້ຝຸ່ນດິນຄືກັນ, ແລະ
ບັນດາຕົວຫນອນກໍກັດກິນປົກຄຸມພວກເຂົາທັງສອງ.
27ເບິ່ງແມ, ຂ້ານ້ອຍຮູ້ຄວາມຄິດທັງຫລາຍຂອງເຈົ້າ, ແລະອຸບາຍທັງຫລາຍທີ່ເຈົ້າປາຖະຫນາເຮັດຜິດຕໍ່ຂ້ານ້ອຍ.28ເພາະເຈົ້າເວົ້າວ່າ,
‘ຕອນນີ້ເຮືອນຂອງເຈົ້າຊາຍຢູ່ທີ່ໃດ? ເຕັນຊຶ່ງຄົນຊົ່ວເຄີຍອາໄສນັ້ນຢູ່ທີ່ໃດ?’
29ເຈົ້າບໍ່ເຄີຍຖາມຄົນສັນຈອນມາບໍ? ເຈົ້າບໍ່ໄດ້ຮັບຮູ້ເຖິງຫລັກຖານທີ່ພວກເຂົາສາມາດບອກໄດ້,30ວ່າຄົນຊົ່ວໄດ້ຖືກມັຽນໄວ້
ຈາກວັນແຫ່ງຄວາມພິນາດ, ແລະທີ່ລາວຈະໄດ້ຖືກນຳອອກໄປຈາກວັນແຫ່ງຄວາມໂກດຮ້າຍຫລື?
31ໃຜຈະກ່າວໂທດວິທີທາງຂອງຄົນຊົ່ວຕໍ່ຫນ້າລາວ? ຜູ້ໃດຈະຕອບແທນລາວສຳລັບສິ່ງທີ່ລາວໄດ້ເຮັດ.32ເຖິງຢ່າງນັ້ນ ລາວຈະຖືກຫາມໄປຍັງຂຸມ
ຝັງສົບ; ແລະບັນດາຜູ້ຊາຍຈະເຝົ້າເຫນືອອຸໂມງຝັງສົບ.33ດິນແຫ່ງພູເຂົາຈະເປັນຂອງຫວານສຳລັບລາວ; ທຸກຄົນຈະຕາມລາວໄປ,
ຢ່າງທີ່ມີຄົນຈຳນວນຫລວງຫລາຍໄດ້ໄປກ່ອນລາວແລ້ວທີ່ນັ້ນ.
34ແລ້ວເຈົ້າປອບໂຍນຂ້ານ້ອຍດ້ວຍສິ່ງທີ່ເປົ່າໆ, ເພາະໃນຄຳຕອບທັງຫລາຍຂອງເຈົ້າບໍ່ມີສິ່ງໃດເລີຍ ນອກຈາກການເວົ້າຂີ້ຕົວະແມ່ນບໍ”

 generated on Tue Jun 17 19:01:42 2025

22 1ແລ້ວເອລີຟັດຊາວເຕມານໄດ້ຕອບ ແລະເວົ້າວ່າ,2"ຄົນສາມາດເປັນປະໂຫຍດຕໍ່ພຣະເຈົ້າໄດ້ບໍ? ຄົນສະຫລາດຄົນຫນຶ່ງສາມາດເປັນປະ-
ໂຫຍດຕໍ່ພຣະອົງໄດ້ບໍ?3ການທີ່ເຈົ້າເປັນຄົນຊອບທັມນັ້ນສ້າງຄວາມພໍພຣະທັຍຢ່າງໃດໃຫ້ກັບອົງຜູ້ຊົງຣິດທານຸພາບຫລື?
ການທີ່ເຈົ້າເຮັດໃຫ້ວິທີທາງຂອງເຈົ້າບໍ່ມີທາງດີນັ້ນ ເຮັດໃຫ້ພຣະອົງໄດ້ຮັບອັນໃດ?

4ເປັນເພາະຄວາມຢຳເກງຂອງເຈົ້າຕໍ່ພຣະອົງ ທີ່ເຮັດໃຫ້ພຣະອົງຊົງຕຳນິເຈົ້າ ແລະ ນຳເຈົ້າເຂົ້າສູ່ການພິພາກສາຢ່າງນັ້ນຫລື?
5ບໍ່ແມ່ນເພາະຄວາມຊົ່ວອັນຍິ່ງໃຫຍ່ຂອງເຈົ້າບໍ່ແມ່ນບໍ? ບໍ່ແມ່ນເພາະຄວາມອະທັມທີ່ບໍ່ສິ້ນສຸດຂອງເຈົ້າ ບໍ່ແມ່ນບໍ?
6ເພາະເຈົ້າໄດ້ຮຽກຮ້ອງການຄ້ຳປະກັນຫນີ້ຈາກພີ່ນ້ອງຂອງເຈົ້າ ໂດຍບໍ່ມີເຫດຜົນ ແລະເຈົ້າໄດ້ປຸ້ນເສື້ອຜ້າຂອງຄົນທີ່ເປືອຍກາຍຢູ່.7ເຈົ້າບໍ່ໄດ້ໃຫ້
ນ້ຳແກ່ຄົນທີ່ຫິວນ້ຳ ແລະເຈົ້າບໍ່ໄດ້ເອົາເຂົ້າໃຫ້ແກ່ຄົນທີ່ຫິວເຂົ້າ.8ເຖິງແມ່ນວ່າເຈົ້າ, ເປັນຄົນທີ່ມີກຳລັງທີ່ຄອບຄອງແຜ່ນດິນໂລກ,
ເຖິງແມ່ນວ່າເຈົ້າ, ເປັນຄົນມີກຽດ, ທີ່ອາໄສຢູ່ທີ່ນັ້ນ.
9ເຈົ້າໄດ້ສົ່ງແມ່ຫມ້າຍອອກໄປດ້ວຍຄວາມວ່າງເປົ່າ; ແລະແຂນທັງຫລາຍຂອງຄົນທີ່ກຳພ້າໄດ້ຖືກເຮັດໃຫ້ຫັກ.10ດ້ວຍເຫດນັ້ນ, ບ້ວງແຮ້ວຈຶ່ງຢູ່
ຮອບຕົວເຈົ້າ ແລະຄວາມຢ້ານຢ່າງກະທັນຫັນ ກໍເຮັດໃຫ້ເຈົ້າລຳບາກ.11ມີຄວາມມືດ ເພື່ອວ່າເຈົ້າຈະບໍ່ສາມາດແນມເຫັນ; ແລະນ້ຳທີ່ຖ້ວມກໍປົກ
ຄຸມເຈົ້າໄວ້.
12ພຣະເຈົ້າບໍ່ໄດ້ສະຖິດຢູ່ໃນທີ່ສູງໃນທ້ອງຟ້າບໍ? ເບິ່ງດາວທັງຫລາຍ ທີ່ຢູ່ໃນທີ່ສູງ, ພວກມັນຢູ່ສູງສັກພຽງໃດ!13ເຈົ້າເວົ້າວ່າ, ‘ພຣະເຈົ້າຊົງຮູ້
ເລື່ອງອັນໃດຫລື? ພຣະອົງຊົງສາມາດຕັດສິນຜ່ານຄວາມມືດທຶບໄດ້ບໍ?14ເມກທຶບປົກຄຸມພຣະອົງໄວ້, ເພື່ອວ່າພຣະອົງຈະບໍ່ຊົງສາມາດ
ເຫັນພວກເຮົາ; ແລະພຣະອົງຊົງດຳເນີນໂດຍຮອບເທິງທ້ອງຟ້າ.’
15ເຈົ້າຈະຮັກສາວິທີທາງເກົ່າທີ່ຄົນຊົ່ວເຄີຍດຳເນີນນັ້ນ-16ຄືຄົນເຫລົ່ານັ້ນທີ່ຖືກຈັບໄປກ່ອນເວລາກຳນົດຂອງພວກເຂົາ, ຄົນເຫລົ່ານັ້ນທີ່ຮາກຖານ
ໄດ້ຖືກພັດໄປເຫມືອນແມ່ນ້ຳສາຍຫນຶ່ງ,17ຄົນເຫລົ່ານັ້ນ ທີ່ໄດ້ທູນຕໍ່ພຣະເຈົ້າວ່າ, ‘ຂໍຊົງແຍກໄປຈາກພວກເຮົາເຖີດ’, ຄົນເຫລົ່ານັ້ນທີ່ໄດ້ເວົ້າວ່າ,
ອົງຊົງມີຣິດທານຸພາບຈະຊົງສາມາດເຮັດສິ່ງໃດຕໍ່ພວກເຮົາຫລື?’
18ແຕ່ພຣະອົງໄດ້ຊົງເຕີມເຮືອນຂອງພວກເຂົາໃຫ້ເຕັມດ້ວຍສິ່ງຕ່າງໆທີ່ດີ; ແຜນການທັງຫລາຍຂອງຄົນຊົ່ວ ກໍຫ່າງໄກຈາກຂ້ານ້ອຍ.19ຄົນຊອບທັມ
ຈະເຫັນໂຊກຊະຕາຂອງພວກເຂົາ ແລະຊົມຊື່ນຍິນດີ; ຄົນບໍ່ມີຄວາມຜິດຈະຫົວເຍາະເຍີ້ຍພວກເຂົາ.20ພວກເຂົາເວົ້າວ່າ, 'ແນ່ນອນເລີຍວ່າ
ຄົນເຫລົ່ານັ້ນຜູ້ໄດ້ລຸກຂຶ້ນໂຈມຕີພວກເຮົາ ຈະຖືກຕັດອອກໄປ; ໄຟໄດ້ເຜົາຜານຊັບສົມບັດທັງຫລາຍຂອງພວກເຂົາ.'
21ບັດນີ້ ຈົ່ງເຫັນດ້ວຍກັບພຣະເຈົ້າ ແລະຈົ່ງຍອມຈຳນົນຕໍ່ພຣະອົງດ້ວຍການກະທຳເຊັ່ນນີ້, ສິ່ງດີກໍຈະເກີດຂຶ້ນກັບເຈົ້າ. 22ຂ້ານ້ອຍຂໍຮ້ອງນຳເຈົ້າ,
ຈົ່ງຍອມຮັບຄຳສັ່ງສອນຈາກປາກຂອງພຣະອົງ; ຈົ່ງບັນຈຸຖ້ອຍຄຳທັງຫລາຍຂອງພຣະອົງໄວ້ໃນຫົວໃຈຂອງເຈົ້າ.
23ຖ້າຫາກເຈົ້າຫັນກັບມາຫາພຣະເຈົ້າອົງມີຣິດທານຸພາບ, ເຈົ້າຈະໄດ້ຮັບການສ້າງຂຶ້ນໃຫມ່.
ຖ້າຫາກເຈົ້າເອົາຄວາມອະທັມໄວ້ຫ່າງໄກຈາກເຕັນຂອງເຈົ້າ.24ວາງຊັບສົມບັດຂອງເຈົ້າລົງໃນຂີ້ຝຸ່ນດິນ ແລະຄຳຂອງເມືອງໂອຟີທ່າມກາງບັນດາ
ຫີນໃນແມ່ນ້ຳທັງຫລາຍ.25ແລະອົງມີຣິດທານຸພາບຈະເປັນຊັບສົມບັດຂອງເຈົ້າ, ເປັນເງິນອັນລ້ຳຄ່າແກ່ເຈົ້າ.
26ເພາະເຈົ້າຈະມີຄວາມເພິ່ງພໍໃຈໃນອົງຜູ້ຊົງຣິດທານຸພາບ; ເຈົ້າຈະເງີຍຫນ້າຂຶ້ນຕໍ່ພຣະເຈົ້າ.27ເຈົ້າຈະອະທິຖານຕໍ່ພຣະອົງ ແລະພຣະອົງຈະໄດ້
ຟັງເຈົ້າ; ແລະເຈົ້າຈະໃຫ້ຕາມຄຳປະຕິຍານຂອງເຈົ້າຕໍ່ພຣະອົງ.28ເຈົ້າຈະຕັດສິນໃຈໃນສິ່ງໃດໆ ແລະສິ່ງນັ້ນຈະມີການຢືນຢັນສຳລັບເຈົ້າ; ແສງ-
ສະຫວ່າງສ່ອງມາທາງຂອງເຈົ້າ
29ພຣະເຈົ້າຊົງເຮັດໃຫ້ຄົນຍິ່ງຖ່ອມຕົວລົງ ແລະພຣະອົງຊົງຊ່ວຍຄົນທີ່ມີດວງຕາອ່ອນໂຍນໃຫ້ລອດ.30ພຣະອົງຈະຊ່ວຍຄົນ ແມ່ນແຕ່ຄົນທີ່ມີຄວາ
ມຜິດໃຫ້ພົ້ນ; ຄືຄົນທີ່ຈະໄດ້ຮັບການຊ່ວຍຜ່ານທາງມືທີ່ສະອາດຂອງເຈົ້າ."

 generated on Tue Jun 17 19:01:42 2025

23 [1]ແລ້ວໂຢບໄດ້ຕອບ ແລະເວົ້າວ່າ,[2]"ຄຳຮ້ອງທຸກຂອງຂ້ານ້ອຍ ເປັນຄວາມຂົມຂື່ນ; ມືຂອງຂ້ານ້ອຍຫນັກເພາະການຮ້ອງຄວນຄາງຂອງ
ຂ້ານ້ອຍ.

[3]ໂອ, ທີ່ຂ້ານ້ອຍຮູ້ວ່າ ຂ້ານ້ອຍຈະພົບພຣະອົງໄດ້ຢູ່ໃສ! ໂອ, ເພື່ອຂ້ານ້ອຍຈະມາເຖິງພຣະທີ່ນັ່ງຂອງພຣະອົງ![4]ຂ້ານ້ອຍຈະຍື່ນຄະດີຂອງຂ້ານ້ອຍ
ຕໍ່ຫນ້າພຣະອົງ ແລະເຕີມປາກຂອງຂ້ານ້ອຍດ້ວຍຄຳໂຕ້ແຍ້ງທັງຫລາຍ.[5]ຂ້ານ້ອຍຈະຮູ້ຄຳຕອບຕ່າງໆຂອງພຣະອົງ
ທີ່ພຣະອົງຈະຊົງຕອບຂ້ານ້ອຍ ແລະເຂົ້າໃຈສິ່ງທີ່ພຣະອົງຈະເວົ້າກັບຂ້ານ້ອຍ.
[6]ພຣະອົງຈະຊົງໄດ້ໂຕ້ແຍ້ງກັບຂ້ານ້ອຍໃນຄວາມຍິ່ງໃຫຍ່ແຫ່ງຣິດທານຸພາບອັນຂອງພຣະອົງຫລື? ບໍ່ເລີຍ, ພຣະອົງຈະໃຫ້ກຳລັງແກ່ຂ້ານ້ອຍ.
[7]ໃນບ່ອນນັ້ນ ຄົນທ່ຽງທັມອາດຈະໂຕ້ແຍ້ງກັບພຣະອົງໄດ້. ດ້ວຍວິທີການນີ້ ຂ້ານ້ອຍຈະໄດ້ຮັບການປະກາດວ່າ ບໍ່ມີຄວາມຜິດຊົ່ວນິຣັນດອນ
ໂດຍຄວາມຍຸຕິທັມຂອງຂ້ານ້ອຍ.
[8]ເບິ່ງແມ, ຂ້ານ້ອຍຍ່າງໄປທາງທິດຕາເວັນອອກ, ແຕ່ພຣະອົງບໍ່ໄດ້ສະຖິດຢູ່ບ່ອນນັ້ນ, ແຕ່ຂ້ານ້ອຍກໍບໍ່ສັງເກດເຫັນພຣະອົງ.[9]ໄປທາງທິດເຫນືອ
ທີ່ຊຶ່ງພຣະອົງຊົງກະທຳກິຈະການ, ແຕ່ຂ້ານ້ອຍບໍ່ສາມາດເຫັນພຣະອົງ, ແລະໄປທາງທິດໃຕ້, ທີ່ຊຶ່ງພຣະອົງ ເຊື່ອງພຣະອົງໄວ້ ເພື່ອຂ້ານ້ອຍ
ຈະບໍ່ສາມາດເຫັນພຣະອົງໄດ້.
[10]ແຕ່ພຣະອົງຊົງໄດ້ຮູ້ຫົນທາງທີ່ຂ້ານ້ອຍໄປ; ເມື່ອພຣະອົງໄດ້ທົດສອບຂ້ານ້ອຍແລ້ວ, ຂ້ານ້ອຍກໍຈະອອກມາເປັນເຫມືອນຄຳ.[11]ຕີນຂອງຂ້ານ້ອຍ
ຍຶດຫມັ້ນໃນບາດກ້າວທັງຫລາຍຂອງຕິດຮອຍຕີນຂອງພຣະອົງ. ຂ້ານ້ອຍໄດ້ຮັກສາວິທີທາງຂອງພຣະອົງ ແລະບໍ່ໄດ້ຫັນໄປທາງຂ້າງເລີຍ.
[12]ຂ້ານ້ອຍບໍ່ໄດ້ຫນີໄປຈາກພຣະບັນຍັດແຫ່ງຮີມພຣະໂອດຂອງພຣະອົງ; ຂ້ານ້ອຍໄດ້ເຫັນຄຸນຄ່າຕໍ່ບັນດາພຣະທັມແຫ່ງພຣະໂອດຂອງພຣະອົງ
ສູງຍິ່ງກວ່າສ່ວນແບ່ງອາຫານຂອງຂ້ານ້ອຍ.
[13]ແຕ່ພຣະອົງຄືຜູ້ຫນຶ່ງທີ່ຊົງເມດຕາ, ໃຜສາມາດເຮັດໃຫ້ພຣະອົງຫັນກັບໄດ້ຫລື? ພຣະອົງມີພຣະປະສົງສິ່ງໃດ, ພຣະອົງກໍໄດ້ກະທຳສິ່ງນັ້ນ.
[14]ເພາະວ່າພຣະອົງຊົງຈະໄດ້ເຮັດສິ່ງທີ່ພຣະອົງໄດ້ກຳນົດທີ່ຕໍ່ຕ້ານຂ້ານ້ອຍນັ້ນຄົບຖ້ວນ, ມີອີກຫລາຍຢ່າງເປັນເຫມືອນສິ່ງເຫລົ່ານັ້ນ.
[15]ດ້ວຍເຫດນັ້ນ, ຂ້ານ້ອຍຈຶ່ງສະທົກສະທ້ານໃນການຊົງສະຖິດຂອງພຣະອົງ; ເມື່ອຂ້ານ້ອຍຄິດເຖິງພຣະອົງ, ຂ້ານ້ອຍກໍຢ້ານກົວພຣະອົງ.
[16]ເພາະພຣະເຈົ້າໄດ້ຊົງກະທຳໃຫ້ໃຈຂອງຂ້ານ້ອຍອ່ອນແຮງ; ອົງຜູ້ຊົງມີຣິດທານຸພາບໄດ້ເຮັດໃຫ້ຂ້ານ້ອຍສະທົກສະທ້ານ.[17]ຂ້ານ້ອຍບໍ່ໄດ້
ຖືກນຳໄປຍັງຈຸດຈົບໂດຍຄວາມມືດ, ເພາະຄວາມມືດທຶບທີ່ປົກຄຸກໃບຫນ້າອັນສິ້ນຫວັງຂອງຂ້ານ້ອຍ.

 generated on Tue Jun 17 19:01:42 2025

24 [1]ເປັນຫຍັງເວລາທັງຫລາຍເພື່ອການຕັດສິນຄົນຊົ່ວຮ້າຍ ຈຶ່ງບໍ່ຕັ້ງໂດຍອົງຜູ້ຊົງຣິດຫລື?
ເປັນຫຍັງຄົນເຫລົ່ານັ້ນທີ່ບໍ່ມີຄວາມຊື່ສັດຕໍ່ພຣະອົງຈຶ່ງບໍ່ໄດ້ເຫັນວັນແຫ່ງການພິພາກສາທັງຫລາຍຂອງພຣະອົງມາເຖິງຫລື?

[2]ມີຄົນຊົ່ວຮ້າຍຜູ້ທີ່ຍ້າຍຫລັກເຂດແດນຕ່າງໆ; ມີຄົນຊົ່ວຮ້າຍຜູ້ທີ່ໃຊ້ກຳລັງບັງຄັບເອົາຝູງແບ້ແກະ ແລະເກັບພວກມັນໄວ້ໃນທົ່ງນາຂອງຕົວເອງ.
[3]ພວກເຂົາຂັບໄລ່ຕ້ອນຝູງລວາຂອງຄົນກຳພ້າພໍ່; ພວກເຂົາເອົາງົວຂອງແມ່ຫມ້າຍໄປເປັນຂອງປະກັນ.[4]ພວກເຂົາບີບບັງຄັບຄົນຂັດສົນ
ໃຫ້ອອກໄປຈາກທາງຂອງພວກເຂົາ; ຄົນຍາກຈົນແຫ່ງແຜ່ນດິນໂລກທັງຫມົດລ້ວນແຕ່ເຊື່ອງຕົວຈາກພວກເຂົາ.
[5]ເບິ່ງແມ, ຄົນຍາກຈົນເຫລົ່ານີ້ອອກໄປເຮັດວຽກຂອງພວກເຂົາເຫມືອນກັບພວກລວາປ່າຢູ່ໃນຖິ່ນແຫ້ງແລ້ງກັນດານ,
ຊອກຫາອາຫານຢ່າງຖີ່ຖ້ວນ; ບາງທີອາຣາບາ ຈະຕຽມອາຫານໃຫ້ພວກເຂົາເພື່ອບັນດາລູກທັງຫລາຍຂອງພວກເຂົາ.
[6]ຄົນຍາກຈົນເກັບກ່ຽວໃນເວລາກາງຄືນໃນທົ່ງຫຍ້າຂອງຄົນອື່ນ. ພວກເຂົາຮວບຮວມຜົນອະງຸ່ນທັງຫລາຍຈາກການ
ເກັບກ່ຽວຂອງຄົນເຫລົ່ານັ້ນທີ່ຊົ່ວຮ້າຍ.[7]ພວກເຂົານອນເປືອຍກາຍຕະຫລອດຄືນໂດຍບໍ່ມີເສື້ອຜ້າປົກປິດ; ແລະພວກເຂົາບໍ່ມີຜ້າຫົ່ມກັນຄວາມ
ຫນາວ.
[8]ພວກເຂົາປຽກຊຸ່ມໄປດ້ວຍຫີມະຈາກພູເຂົາທັງຫລາຍ; ພວກເຂົານອນລົງຂ້າງໆກ້ອນຫີນໃຫ່ຍເພາະບໍ່ມີບ່ອນກຳບັງ.[9]ມີຄົນຊົ່ວຮ້າຍທີ່ຈັບເອົາ
ເດັກກຳພ້າພໍ່ໄປຈາກເອິກຂອງແມ່, ແລະຄົນຊົ່ວຮ້າຍທີ່ຈັບເດັກເປັນປະກັນຈາກຄົນຍາກຈົນ.[10]ແຕ່ຄົນຍາກຈົນໄປຕົວເປົ່າໂດຍບໍ່ມີເສື້ອຜ້າ,
ເຖິງແມ່ນວ່າພວກເຂົາຫິວກໍຕາມ, ພວກເຂົາກໍຕ້ອງແບກຟ່ອນເຂົ້າໄປຈາກຄົນທີ່ຫິວ.
[11]ຄົນຍາກຈົນເຮັດນ້ຳມັນໃນກຳແພງທັງຫລາຍຂອງຄົນເຫລົ່ານັ້ນທີ່ຊົ່ວຮ້າຍ; ພວກເຂົາຢຽບອະງຸ່ນໃນບໍ່ອະງຸ່ນຂອງຄົນຊົ່ວຮ້າຍ;
ແຕ່ພວກເຂົາກັບທົນທຸກໃນຄວາມຫິວກະຫາຍ.[12]ໃນເມືອງນັ້ນຜູ້ຄົນຕ່າງຄວນຄາງ; ຄົນທີ່ບາດເຈັບຮ້ອງຂໍສຽງດັງ, ແຕ່ພຣະເຈົ້າບໍ່ໄດ້ສົນໃຈໃນ
ຄຳອະທິຖານທັງຫລາຍຂອງພວກເຂົາ.
[13]ຄົນຊົ່ວເຫລົ່ນນີ້ບາງຄົນກະບົດຕໍ່ຄວາມສະຫວ່າງ; ພວກເຂົາບໍ່ຮູ້ທາງຂອງມັນ, ຫລືພວກເຂົາບໍ່ຢູ່ໃນທາງຂອງຄວາມສະຫວ່າງນັ້ນ.
[14]ກ່ອນຈະສະຫວ່າງຄາດຕະກຳກໍລຸກຂຶ້ນ ແລະເຂົາຂ້າຄົນຍາກຈົນ ແລະຄົນຂັດສົນ; ໃນກາງຄືນເຂົາເປັນເຫມືອນຄົນຂີ້ລັກ.
[15]ເຊັ່ນດຽວກັນ, ດວງຕາຂອງຄົນລ່ວງປະເວນີກໍຄອຍຖ້າເວລາຄໍ່າ; ລາວເວົ້າວ່າ, 'ບໍ່ມີດວງຕາໃດຈະເຫັນຂ້ານ້ອຍ,' ແລະລາວກໍປົກຫນ້າຂອງ
ລາວ.[16]ໃນຍາມມືດ ຄົນຊົ່ວຮ້າຍເຈາະເຂົ້າໄປໃນເຮືອນຕ່າງໆ; ແຕ່ພວກເຂົາເກັບຕົວເອງງຽບໃນເວລາກາງວັນ; ພວກເຂົາບໍ່ສົນໃຈຄວາມສະ-
ຫວ່າງ.[17]ສຳລັບພວກເຂົາທັງ ຫມົດ ຄວາມມືດທຶບ ກໍເປັນເຫມືອນເວລາເຊົ້າ; ເພາະພວກເຂົາເປັນເພື່ອນກັບຄວາມຫນ້າກົວແຫ່ງຄວາມມືດທຶບ.
[18]ພວກເຂົາຜ່ານໄປຢ່າງໄວວາ, ແຕ່ກໍເປັນເຫມືອນກັບຟອງທີ່ຢູ່ເທິງຜິວນ້ຳ; ສ່ວນແບ່ງດິນແດນຂອງພວກເຂົາຖືກສາບແຊ່ງ;
ບໍ່ມີໃຜໄປເຮັດວຽກໃນສວນອະງຸ່ນຂອງພວກເຂົາໄດ້.[19]ເມື່ອຄວາມແຫ້ງແລ້ງ ແລະຄວາມຮ້ອນເຮັດໃຫ້ຫິມະລະລາຍເປັນນ້ຳ,
ດັ່ງນັ້ນແດນຄົນຕາຍກໍຈັບເອົາຄົນເຫລົ່ານັ້ນທີ່ໄດ້ເຮັດບາບ.
[20]ທ້ອງແມ່ທີ່ອຸ້ມລາວມາຈະລືມລາວ; ຕົວໜອນຈະກິນຕົວລາວຢ່າງແຊບ; ດ້ວຍວິທີນີ້ ຄົນຊົ່ວຮ້າຍຈະຖືກທຳລາຍເຫມືອນກັບຕົ້ນໄມ້ຕົ້ນຫນຶ່ງ.
[21]ຄົນຊົ່ວຮ້າຍທີ່ລ້າງຜານຫມັນທີ່ບໍ່ມີລູກ; ເຂົາບໍ່ໄດ້ເຮັດສິ່ງດີແກ່ແມ່ຫມ້າຍ.
[22]ແຕ່ພຣະເຈົ້າຍັງຊົງລາກຄົນທີ່ມີກຳລັງອອກໄດ້ວຍຣິດທານຸພາບຂອງພຣະອົງ. ພຣະອົງຊົງລຸກຂຶ້ນ ແລ້ວບໍ່ຊົງເສີມກຳລັງໃນຊີວິດຂອງພວກເຂົາ.
[23]ພຣະເຈົ້າຊົງຍອມໃຫ້ພວກເຂົາຄິດວ່າພວກເຂົາປອດພັຍ, ແລະພວກເຂົາມີຄວາມສຸກກ່ຽວກັບສິ່ງນັ້ນ, ແຕ່ສາຍຕາຂອງພຣະອົງຢູ່
ເຫນືອທາງທັງຫລາຍຂອງພວກເຂົາ.
[24]ຄົນເຫລົ່ານີ້ ໄດ້ຮັບການຍົກຍໍ ແຕ່ກໍເປັນພຽງຊ່ວງເວລາຫນຶ່ງເທົ່ານັ້ນ, ພວກເຂົາຈະຕ້ອງຈາກໄປ; ອັນທີ່ຈິງ, ພວກເຂົາຈະຖືກນຳລົງໄປທີ່ຕໍ່າ;
ພວກເຂົາຈະຖືກຮວບຮວມເຫມືອນກັບຄົນອື່ນໆ ທັງຫມົດ; ພວກເຂົາຈະຖືກຕັດອອກໄປເຫມືອນກັບຮວງເຂົ້າ.[25]ຖ້າຫາກມັນບໍ່ເປັນເຊັ່ນນັ້ນແລ້ວ,
ໃຜທີ່ສາມາດຈະພິສູດໄດ້ວ່າ ຂ້ານ້ອຍຂີ້ຕົວະ; ໃຜທີ່ສາມາດເຮັດໃຫ້ຄຳເວົ້າຂອງຂ້ານ້ອຍບໍ່ມີປະໂຫຍດ?"


generated on Tue Jun 17 19:01:42 2025

25 [1]1 ແລ້ວບິນດັດຄົນຊູອາໄດ້ຕອບ ແລະເວົ້າວ່າ,[2]“ພຣະເຈົ້າຊົງຄອບຄອງ ແລະຫນ້າຢໍາເກງ; ພຣະ-
ອົງຊົງບັນຊາໃນສະຖານທີ່ສູງແຫ່ງທ້ອງຟ້າຂອງພຣະອົງ.[3]ກອງທັບທັງຫລາຍຂອງພຣະອົງ ມີຈໍານວນທີ່ສິ້ນສຸດບໍ? ມີໃຜຫລື ທີ່ພຣະອົງບໍ່ໄດ້
ສ່ອງແສງສະຫວ່າງມາເຫນືອລາວແດ່?

[4]ແລ້ວມະນຸດຈະສາມາດເປັນຄົນຊອບທັມຕໍ່ພຣະເຈົ້າໄດ້ຢ່າງໃດ? ເຂົາຜູ້ທີ່ເກີດຈາກຜູ້ຍິງຄົນຫນຶ່ງທີ່ບໍຣິສຸດ, ເປັນທີ່ຍອມຮັບຕໍ່ພຣະອົງໄດ້ຢ່າງ-
ໃດ?[5]ເບິ່ງແມ, ເຖິງແມ່ນແຕ່ ດວງເດືອນກໍບໍ່ສະຫວ່າງແຈ້ງຕໍ່ພຣະອົງ; ດວງດາວທັງຫລາຍກໍບໍ່ບໍຣິສຸດໃນສາຍຕາຂອງພຣະອົງ.
[6]ມະນຸດຍິ່ງນ້ອຍກວ່ານັ້ນເທົ່າໃດ, ຜູ້ທີ່ເປັນພຽງຕົວຫນອນ - ລູກຂອງມະນຸດ, ຜູ້ທີ່ຕົວຫນອນຕົວຫນຶ່ງ!"

 generated on Tue Jun 17 19:01:42 2025

26 [1]ແລ້ວໂຢບໄດ້ຕອບ ແລະເວົ້າວ່າ,[2]“ເຈົ້າໄດ້ຊ່ວຍເຫລືອຄົນທີ່ບໍ່ມີກຳລັງຈິງໆ! ເຈົ້າໄດ້ຊ່ວຍແຂນທີ່ບໍ່ມີກຳລັງ!
[3]ເຈົ້າໄດ້ໃຫ້ຄຳແນະນຳແກ່ຄົນທີ່ບໍ່ມີສະຕິປັນຍາ ແລະປະກາດແກ່ລາວດ້ວຍຄວາມຮູ້ທີ່ດີເຫລືອເກີນ![4]ການທີ່ເຈົ້າໄດ້ກ່າວຖ້ອຍ-
ຄຳເຫລົ່ານີ້ມັນຊ່ວຍໃຜໄດ້ແດ່? ວິນຍານຂອງໃຜທີ່ອອກຈາກເຈົ້າແມ່ນຂອງໃຜ?

[5]ຄວາມຕາຍກໍຖືກສ້າງຂຶ້ນມາ ເພື່ອຄວາມຫນ້າຢ້ານກົວ, ທັງຄົນເຫລົ່ານັ້ນທີ່ຢູ່ໃຕ້ນ້ຳທັງຫລາຍ ແລະທຸກສິ່ງທີ່ອາໄສຢູ່ໃນນ້ຳນັ້ນ.[6]ແດນຄົນຕາຍ
ກໍຖືກເຮັດໃຫ້ເປືອຍເປົ່າຕໍ່ຫນ້າພຣະເຈົ້າ; ການທຳລາຍ ກໍບໍ່ມີສິ່ງປົກປິດຕໍ່ພຣະອົງ.
[7]ພຣະອົງຊົງໄດ້ຄຶງທ້ອງຟ້າທາງທິດເຫນືອ ເທິງພື້ນທີ່ຫວ່າງເປົ່າ ແລະພຣະອົງຊົງແຂວນແຜ່ນດິນໂລກໄວ້ເຫນືອບ່ອນທີ່ວ່າງເປົ່າ.[8]ພຣະອົງຊົງໄດ້
ຫຸ້ມຫໍ່ນ້ຳໄວ້ໃນເມກທຶບຂອງພຣະອົງ, ແຕ່ເມກທັງຫລາຍນັ້ນກໍຈະບໍ່ແຕກກະຈາຍໃຕ້ນ້ຳນັ້ນ.
[9]ພຣະອົງຊົງປົກຄຸມຜິວດວງເດືອນ ແລະແຜ່ເມກທັງຫລາຍຂອງພຣະອົງເທິງດວງເດືອນນັ້ນ.[10]ພຣະອົງຊົງໄດ້ຂີດຫມາຍເປັນວົງມົນໄວ້ເທິງຜິວນ້ຳ
ເພື່ອເປັນເສັ້ນແບ່ງລະຫວ່າງຄວາມສະຫວ່າງແລະຄວາມມືດ.
[11]ເສົາທັງຫລາຍຂອງທ້ອງຟ້າກໍຫວັ່ນໄຫວ ແລະປະຫລາດໃຈຕໍ່ການວ່າກ່າວຂອງພຣະອົງ.[12]ພຣະອົງໄດ້ຊົງເຮັດໃຫ້ທະເລສະຫງົບດ້ວຍຣິດທານຸ-
ພາບຂອງພຣະອົງ; ໂດຍຄວາມເຂົ້າໃຈຂອງພຣະອົງ ພຣະອົງໄດ້ຊົງເຮັດໃຫ້ຣາຮັບກະແຈກກະຈາຍ.
[13]ໂດຍລົມຫາຍໃຈຂອງພຣະອົງໄດ້ເຮັດໃຫ້ບັນດາທ້ອງຟ້າສ່ອງໃສ; ພຣະຫັດຂອງພຣະອົງໄດ້ແທງງູທີ່ກຳລັງຫນີໄປ.[14]ເບິ່ງແມ, ສິ່ງເຫລົ່ານີ້ເປັນ-
ພຽງເສັ້ນຂອບແຫ່ງວິທີທາງທັງຫລາຍຂອງພຣະອົງ; ສຽງຊຶມຄ່ອຍໆທີ່ເຮົາໄດ້ຍິນຈາກພຣະອົງນັ້ນຊ່າງເບົາເຫລືອເກີນ.
ໃຜສາມາດເຂົ້າໃຈສຽງຟ້າຮ້ອງແຫ່ງຣິດທານຸພາບຂອງພຣະອົງໄດ້?”

 generated on Tue Jun 17 19:01:42 2025

27 [1]ໂຢບໄດ້ກ່າວຕໍ່ໄປ ແລະລາວໄດ້ເວົ້າວ່າ, [2]“ຕາບໃດພຣະເຈົ້າຍັງມີພຣະຊົນຢູ່ຢ່າງແນ່ນອນ, ຜູ້ຊົງເອົາຄວາມຍຸຕິທັມຂອງຂ້ານ້ອຍອອກໄປ,
ອົງຜູ້ມີຣິດທານຸພາບ, ຜູ້ມີເຮັດໃຫ້ຊີວິດຂອງຂ້ານ້ອຍຂົມຂື່ນ, [3]ໃນຂະນະທີ່ຊີວິດຂອງຂ້ານ້ອຍ, ແລະລົມຫາຍໃຈຈາກພຣະເຈົ້າຍັງຢູ່ໃນຮູດັງ
ຂອງຂ້ານ້ອຍ, ນີ້ຄືສິ່ງທີ່ຂ້ານ້ອຍຈະເຮັດ.

[4]ຮີມປາກຂອງຂ້ານ້ອຍຈະບໍ່ເວົ້າຄວາມບໍ່ຈິງ ແລະລີ້ນຂອງຂ້ານ້ອຍຈະບໍ່ເປັ່ງຄຳຂີ້ຕົວະ.
[5]ຂ້ານ້ອຍບໍ່ຍອມຮັບວ່າພວກເຈົ້າທັງສາມເປັນການຖືກຕ້ອງ; ຈົນກວ່າຂ້ານ້ອຍຕາຍ ຈະບໍ່ມີວັນປະຕິເສດຄວາມຊື່ສັດຂອງຂ້ານ້ອຍ.
[6]ຂ້ານ້ອຍໄດ້ຍຶດຄວາມຊອບທັມຂອງຂ້ານ້ອຍ ແລະບໍ່ຍອມປ່ອຍມັນໄປ; ຄວາມຄິດທັງຫລາຍຂອງຂ້ານ້ອຍບໍ່ຕໍານິຂ້ານ້ອຍ
ນານຕາບຈົນເຖິງທີ່ຂ້ານ້ອຍມີຊີວິດຢູ່. [7]ປ່ອຍໃຫ້ສັດຕຣູຂອງຂ້ານ້ອຍເປັນເຫມືອນຄົນຊົ່ວຮ້າຍ; ປ່ອຍໃຫ້ລາວຜູ້ທີ່ລຸກຂຶ້ນຕໍ່ສູ້ຂ້ານ້ອຍເປັນເຫມືອນ
ຄົນອະທັມ.
[8]ເພາະອັນໃດຄືຄວາມຫວັງຂອງຄົນທີ່ບໍ່ນັບຖືພຣະເຈົ້າ ເມື່ອພຣະເຈົ້າຊົງຕັດລາວອອກໄປ, ເມື່ອພຣະເຈົ້າໄດ້ເອົາຊີວິດຂອງລາວໄປຫລື? [9]ພຣະເຈົ້າ
ຈະໄດ້ຟັງສຽງຮ້ອງໄຫ້ຂອງລາວ? ເມື່ອຄວາມຍາກລໍາບາກມາເຫນືອລາວຫລື? [10]ລາວຈະປິຕິຍິນດີກັບຕົວເອງໃນອົງຜູ້ມີຣິດທານຸພາບ
ແລະກາບທູນພຣະເຈົ້າຈະທຸກເວລາບໍ?
[11]ຂ້ານ້ອຍຈະສັ່ງສອນເຈົ້າທັງຫລາຍກ່ຽວກັບພຣະຫັດຂອງພຣະເຈົ້າ; ຂ້ານ້ອຍຈະບໍ່ປິດບັງພຣະດໍາຣິຕ່າງໆຂອງພຣະເຈົ້າອົງຜູ້ຊົງມີ
ຣິດທານຸພາບ. [12]ເບິ່ງແມ, ພວກເຈົ້າທຸກຄົນໄດ້ເຫັນຕົວເອງຂອງພວກເຈົ້າ; ເປັນຫຍັງພວກເຈົ້າຈຶ່ງເວົ້າສິ່ງທັງຫມົດທີ່ເຫລວໄຫລເຊັ່ນນີ້?
[13]ນີ້ຄືຈຸດຫມາຍປາຍທາງຂອງຄົນຊົ່ວຮ້າຍຕໍ່ພຣະເຈົ້າ, ມໍຣະດົກຂອງຜູ້ບີບບັງຄັບທັງຫລາຍທີ່ໄດ້ຮັບຈາກອົງຜູ້ມີຣິດທານຸພາບ. [14]ຖ້າຫາກລູກຂອງ
ລາວເພີ່ມຂຶ້ນ, ມັນກໍເພື່ອດາບ; ເຊື້ອສາຍຂອງລາວຈະບໍ່ມີວັນທີ່ອາຫານພຽງພໍກິນ.
[15]ຄົນເຫລົ່ານີ້ ທີ່ຊ່ວຍຊີວິດຂອງເຂົາໃຫ້ລອດ ຈະຖືກຝັງໂດຍໂຣກລະບາດຮຸນແຮງ, ແລະແມ່ຫມ້າຍທັງຫລາຍຂອງພວກເຂົາຈະບໍ່ຮ້ອງ
ຄວນຄາງເພື່ອພວກເຂົາ. [16]ເຖິງແມ່ນວ່າ ຄົນຊົ່ວຮ້າຍສະສົມເງິນໄວ້ເຫມືອນກັບສະສົມຝຸ່ນ ແລະສະສົມເສື້ອຜ້າ ເຫມືອນສະສົມຂີ້ດິນ. [17]ເຂົາ
ຈະສະສົມເສື້ອຜ້າ, ແຕ່ຄົນຊອບທັມຈະເອົາໄປນຸ່ງ, ແລະຄົນທີ່ບໍ່ມີຄວາມຜິດຈະແບ່ງເງິນກັນທ່າມກາງພວກເຂົາເອງ.
[18]ເຂົາສ້າງເຮືອນຂອງລາວເຫມືອນແມງມຸມສ້າງຮັງ, ເຫມືອນກະຕູບທີ່ຄົນຍາມສ້າງ. [19]ເຂົານອນລົງເທິງຕຽງຂອງຄົນຮັ່ງມີ, ແຕ່
ເຂົາຈະເຮັດຕໍ່ໄປບໍ່ໄດ້; ເຂົາເປີດຕາຂອງເຂົາ ແລະທຸກສິ່ງກໍຫາຍໄປ.
[20]ຄວາມຢ້ານກົວຈະຖ້ວມລາວເຫມືອນກັບນ້ຳຖ້ວມ; ພາຍຸພັດລາວໄປໃນເວລາກາງຄືນ. [21]ລົມຈາກທິດຕາເວັນອອກຈະຫອບເອົາລາວໄປ, ແລະ
ລາວຈາກໄປ; ມັນກວາດລາວອອກໄປຈາກບ່ອນຂອງລາວ.
[22]ມັນໂຍນຕົວມັນເອງໃສ່ລາວ ແລະບໍ່ຢຸດຢັ້ງ; ລາວພະຍາຍາມຫນີອອກໄປຈາກມືຂອງມັນ. [23]ມັນຕົບມືຂອງມັນໃສ່ລາວດ້ວຍການເຍາະເຍີ້ຍ;
ມັນຂູ່ລາວໃຫ້ອອກໄປຈາກບ່ອນຂອງລາວ.


generated on Tue Jun 17 19:01:42 2025

28 [1]ແນ່ນອນແລ້ວມີບໍ່ແຮ່ເງິນ, ມີສະຖານທີ່ ໆ ພວກເຂົາກັ່ນຄຳ.[2]ແຮ່ເຫລັກຖືກເອົາອອກມາຈາກພື້ນດິນ; ແຮ່ທອງເຫລືອງຖືກຫລອມມາຈາກ
ກ້ອນຫີນ.

[3]ມະນຸດຄົນຫນຶ່ງກຳຫນົດຈຸດສິ້ນສຸດໃຫ້ກັບຄວາມມືດ, ແລະຄົ້ນຫາໄປຍັງເຂດຫ່າງໄກທີ່ສຸດ, ກ້ອນຫີນຕ່າງໆ ໃນທີ່ລັບ ແລະໃນຄວາມມືດທຶບ.[4]-
ເຂົາເປີດອຸໂມງທີ່ຢູ່ຫ່າງໄກຈາກທີ່ຜູ້ຄົນອາໄສຢູ່, ສະຖານທີ່ຕ່າງໆ ທີ່ຕີນຂອງຜູ້ຄົນຫລົງລືມ. ລາວແຂວນເອົາໄວ້ໄກຈາກຜູ້ຄົນ;
ລາວແກ່ວງໄປແລະມາ.
[5]ສຳລັບແຜ່ນດິນໂລກ, ອາຫານກໍອອກມາ, ເບື້ອງລຸ່ມກັບມາເປັນເຫມືອນໄຟ.[6]ກ້ອນຫີນທັງຫລາຍຂອງມັນເປັນສະຖານທີ່ໆ ມໍຣະກົດຖືກຄົ້ນພົບ,
ແລະຂີ້ຂອງມັນບັນຈຸຄຳ.
[7]ບໍ່ມີນົກໂຕໃດທີ່ເປັນເຫຍື່ອຮູ້ຈັກທາງນັ້ນ, ບໍ່ມີດວງຕາຂອງນົກຕົວໃດທີ່ແນມເຫັນມັນ.[8]ສັດທີ່ອວດອ້າງບໍ່ໄດ້ເຄີຍຍ່າງທາງນັ້ນ, ຫລືໂຕສິງໂຕໂຫດ-
ຮ້າຍກໍບໍ່ໄດ້ຜ່ານບ່ອນນັ້ນ.
[9]ມະນຸດຄົນຫນຶ່ງວາງມືຂອງເຂົາເທິງຫີນເຫລັກໄຟ; ເຂົາເຮັດໃຫ້ພູເຂົາຕ່າງໆຖືກທຳລາຍລົງເຖິງຮາກທັງຫລາຍຂອງມັນ.[10]ເຂົາຕັດຊ່ອງທາງຕ່າງໆ
ໃນທ່າມກາງກ້ອນຫີນທັງຫລາຍ; ດວງຕາຂອງເຂົາແນມເຫັນສິ່ງທີ່ມີຄ່າທຸກຢ່າງທີ່ນັ້ນ.[11]ລາວປິດແມ່ນ້ຳຕ່າງໆ ເພື່ອນ້ຳຈະບໍ່ໄຫລ; ສິ່ງທີ່ປິດບັງ
ໄວ້ທີ່ນັ້ນ ເຂົາກໍນຳອອກມາສູ່ຄວາມສະຫວ່າງ.
[12]ສະຕິປັນຍາຈະຖືກຄົ້ນພົບບ່ອນໃດ? ສະຖານທີ່ແຫ່ງຄວາມເຂົ້າໃຈຢູ່ທີ່ໃດ?[13]ມະນຸດບໍ່ຮູ້ຈັກຄ່າຂອງສະຕິປັນຍາ; ຫລືບໍ່ໄດ້ພົບມັນໃນແຜ່ນດິນ
ຂອງຄົນເປັນ.[14]ນ້ຳເລິກພາຍໃຕ້ແຜ່ນດິນໂລກເວົ້າວ່າ, ‘ມັນບໍ່ຢູ່ໃນຂ້ານ້ອຍ’ ແລະທະເລກ່າວວ່າ‘ມັນບໍ່ຢູ່ກັບຂ້ານ້ອຍ'.
[15]ມັນບໍ່ສາມາດໄດ້ມາດ້ວຍຄຳ; ຫລືບໍ່ສາມາດໄດ້ຮັບການຕີລາຄາດ້ວຍເງິນ. [16]ມັນບໍ່ສາມາດໄດ້ຮັບການວັດຄຸນຄ່າດ້ວຍຄຳແຫ່ງໂອຟີ ດ້ວຍພອຍ
ສີນ້ຳເຂົ້າປະເສີດ ຫລືແກ້ວໄພທູນ.[17]ຄຳ ແລະແກ້ວບໍຣິສຸດບໍ່ສາມາດມີຄ່າທຽບເທົ່າມັນໄດ້ ຫລືບໍ່ສາມາດແລກປ່ຽນກັບເຄື່ອງຄຳບໍຣິສຸດເນື້ອດີ.
[18]ຢ່າເອີຍເຖິງຄຸນຄ່າຂອງຫີນປະກາລັງ ແລະຍົກມໍຣະກົດເລີຍ; ແທ້ຈິງແລ້ວ, ລາຄາຂອງສະຕິປັນຍານັ້ນມີຫລາຍສູງກວ່າບັນດາທັບທິມ.
[19]ຍົກເຫລືອງຂອງເມືອງເອທີໂອເປຍ ກໍບໍ່ສາມາດປຽບຄ່າໄດ້ດ້ວຍຄຳບໍຣິສຸດ.
[20]ແລ້ວສະຕິປັນຍາມາຈາກໃສ? ສະຖານທີ່ຂອງຄວາມເຂົ້າໃຈຢູ່ທີ່ໃດຫລື?[21]ສະຕິປັນຍານັ້ນທີ່ເຊື່ອງພົ້ນຈາກດວງຕາທັງຫລາຍຂອງສິ່ງທີ່ມີຊີ-
ວິດທັງຫມົດ ແລະປິດບັງໄວ້ຈາກບັນດານົກແຫ່ງທ້ອງຟ້າ.[22]ການທຳລາຍ ແລະຄວາມຕາຍເວົ້າວ່າ, ‘ເຮົາໄດ້ຍິນຂ່າວຊ່າລືກ່ຽວກັບມັນດ້ວຍຫູ
ຂອງເຮົາ’
[23]ພຣະເຈົ້າຊົງເຂົ້າໃຈທາງໄປຫາສະຕິປັນຍານັ້ນ; ພຣະອົງຊົງຮູ້ຈັກສະຖານທີ່ຂອງສະຕິປັນຍາດ້ວຍ.[24]ເພາະພຣະອົງທອດພຣະເນດໄປເຖິງທີ່ສຸດ
ປາຍແຜ່ນດິນໂລກ ແລະຊົງເຫັນທຸກສິ່ງທີ່ໃຕ້ທ້ອງຟ້າສະຫວັນທັງຫມົດ.[25]ພຣະອົງໄດ້ຊົງກຳນົດນ້ຳແຮງລົມ ແລະ
ແບ່ງນ້ຳທັງຫລາຍອອກດ້ວຍເຄື່ອງຜອງ.
[26]ພຣະອົງໄດ້ສ້າງກົດເກນສຳລັບຝົນ ແລະສ້າງທາງໄວ້ສຳລັບຟ້າຮ້ອງຟ້າຜ່າ.[27]ແລ້ວພຣະອົງທອດພຣະເນດສະຕິປັນຍາ ແລະໄດ້ປະ-
ກາດມັນອອກໄປ; ພຣະອົງໄດ້ຊົງສະຖາປະນາມັນ, ແທ້ຈິງແລ້ວ, ແລະ ພຣະອົງໄດ້ຊົງທົດລອງມັນ.[28]ຕໍ່ຜູ້ຄົນ ພຣະອົງກ່າວວ່າ, ‘ເບິ່ງແມ, ຄວາມ
ຢຳເກງອົງພຣະຜູ້ເປັນເຈົ້ານັ້ນແຫລະ ຄືສະຕິປັນຍາ; ການອອກຫ່າງຈາກຄວາມຊົ່ວ ກໍເປັນຄວາມເຂົ້າໃຈ.’”

 generated on Tue Jun 17 19:01:42 2025

29 [1]ໂຢບຈຶ່ງເວົ້າຕໍ່ໄປ ແລະກ່າວວ່າ,[2]“ໂອ ຫາກຂ້ານ້ອຍຢາກຈະຢູ່ຄືຂ້ານ້ອຍໄດ້ເປັນເມື່ອຫລາຍເດືອນກ່ອນທີ່ພຣະເຈົ້າໄດ້ຊົງຫ່ວງໄຍຂ້ານ້ອຍ,
[3]ເມື່ອຕະກຽງຂອງພຣະອົງສ່ອງສະຫວ່າງເຫນືອເທິງຫົວຂອງຂ້ານ້ອຍ, ແລະເມື່ອຂ້ານ້ອຍໄດ້ເດີນຜ່ານຄວາມມືດ ໂດຍຄວາມສະຫວ່າງ
ຂອງພຣະອົງ.

[4]ໂອ, ຫາກຂ້ານ້ອຍຈະເປັນຢ່າງທີ່ຂ້ານ້ອຍໄດ້ເປັນໃນຄວາມສົມບູນແຫ່ງວັນທັງຫລາຍຂອງຂ້ານ້ອຍ ເມື່ອ
ສຳພັນທະພາບກັບພຣະເຈົ້າໄດ້ຢູ່ໃນເຕັນຂອງຂ້ານ້ອຍ,[5]ເມື່ອອົງຜູ້ມີຣິດທານຸພາບຍັງຊົງຢູ່ກັບຂ້ານ້ອຍ, ແລະ
ບັນດາລູກຂອງຂ້ານ້ອຍໄດ້ຢູ່ລ້ອມຮອບຂ້ານ້ອຍ,[6]ເມື່ອຫົນທາງຂອງຂ້ານ້ອຍໄດ້ຖືກປົກຄຸມໄວ້ດ້ວຍສ່ວນທີ່ດີທີ່ສຸດ,
ແລະກ້ອນຫີນນັ້ນໄດ້ຫລັ່ງສາຍນ້ຳແຫ່ງນ້ຳມັນອອກໃຫ້ແກ່ຂ້ານ້ອຍ.
[7]ເມື່ອຂ້ານ້ອຍອອກມາຍັງປະຕູເມືອງ, ເມື່ອຂ້ານ້ອຍຕຽມໄດ້ນັ່ງໃນບ່ອນຂອງຂ້ານ້ອຍທີ່ລານເມືອງ,[8]ຄົນຫນຸ່ມທັງຫລາຍ
ເຫັນຂ້ານ້ອຍແລະຢູ່ຫ່າງຈາກຂ້ານ້ອຍດ້ວຍຄວາມເຄົາຣົບ, ແລະຄົນສູງອາຍຸໄດ້ລຸກຂຶ້ນ ແລະຢືນຕ້ອນຮັບຂ້ານ້ອຍ.
[9]ບັນດາເຈົ້ານາຍທັງຫລາຍຢຸດການໂອ້ລົມ ເມື່ອຂ້ານ້ອຍມາເຖິງ; ພວກເຂົາໄດ້ເອົາມືປິດປາກຂອງຕົນໄວ້.[10]ສຽງຂອງບັນດາຂ້າຣາຊະ-
ການທັງຫລາຍກໍສະຫງົບລົງ: ແລະລີ້ນຂອງພວກເຂົາກໍຕິດເພດານປາກຂອງພວກເຂົາ.
[11]ເພາະຫລັງຈາກຫູຂອງພວກເຂົາໄດ້ຍິນຂ້ານ້ອຍ, ແລ້ວພວກເຂົາຈະອວຍພອນຂ້ານ້ອຍ; ຫລັງຈາກດວງຕາຂອງພວກເຂົາ ໄດ້ເຫັນຂ້ານ້ອຍ,
ພວກເຂົາຈະໃຫ້ຄຳພະຍານຕໍ່ຂ້ານ້ອຍ ແລະຍອມຮັບຂ້ານ້ອຍ.[12]ເພາະວ່າຂ້ານ້ອຍໄດ້ຊ່ວຍຄົນຍາກຈົນ ເມື່ອເຂົາຮ້ອງໃຫ້ຊ່ວຍ, ແລະ
ຊ່ວຍຄົນທີ່ເດັກກຳພ້າພໍ່ ເມື່ອເຂົາບໍ່ມີໃຜຊ່ວຍເຂົາ.[13]ການອວຍພອນຂອງລາວຜູ້ທີ່ຈະຕ້ອງຕາຍກໍໄດ້ມາເຖິງຂ້ານ້ອຍ; ຂ້ານ້ອຍໄດ້ເປັນເຫດໃຫ້
ຈິດໃຈຂອງແມ່ຫມ້າຍ ຮ້ອງເພງດ້ວຍຄວາມຊົມຊື່ນຍິນດີ.
[14]ຂ້ານ້ອຍໄດ້ເອົາຄວາມຊອບທັມ ແລະມັນກໍຫຸ້ມຂ້ານ້ອຍໄວ້; ຄວາມຍຸຕິທັມຂອງຂ້ານ້ອຍໄດ້ເປັນເຫມືອນເສື້ອຄຸມ ແລະຜ້າຄຽນ
ຫົວ[15]ແລະຂ້ານ້ອຍໄດ້ເປັນຕີນໃຫ້ຄົນງ່ອຍ.[16]ຂ້ານ້ອຍເປັນພໍ່ໃຫ້ຄົນຂັດສົນ; ຂ້ານ້ອຍພິຈາຣະນາຄະດີ ແມ້ແຕ່ຂອງຜູ້ທີ່ຂ້ານ້ອຍບໍ່ຮູ້ຈັກ.
[17]ຂ້ານ້ອຍໄດ້ຫັກກະດູກຄາງຂອງຄົນຊົ່ວ; ຂ້ານ້ອຍໄດ້ຊ່ວຍຜູ້ຕົກເປັນເຫຍື່ອອອກຈາກລະຫວ່າງແຂ້ວຂອງລາວ.[18]ແລ້ວຂ້ານ້ອຍໄດ້ເວົ້າວ່າ,
‘ຂ້ານ້ອຍຈະຕາຍໃນຮັງຂອງຂ້ານ້ອຍ; ຂ້ານ້ອຍຈະເພີ່ມທະວີຄູນວັນທັງຫລາຍຂອງຂ້ານ້ອຍເຫມືອນກັບເມັດຊາຍທັງຫລາຍ.
[19]ຮາກທັງຫລາຍຂອງຂ້ານ້ອຍຈະແຜ່ຂະຫຍາຍໄປເຖິງນ້ຳ, ແລະນ້ຳຫມອກຈະຢອດລົງເທິງກິ່ງທັງຂອງຂ້ານ້ອຍຕະຫລອດທັງຄືນ.
[20]ກຽດສະຫງ່າຣາສີທີ່ຂ້ານ້ອຍມີນັ້ນ ສົດໃຫມ່ສະເຫມີ, ແລະຄັນທະນູແຫ່ງກຳລັງຂອງຂ້ານ້ອຍໃຫມ່ໃນມືຂ້ານ້ອຍສະເຫມີ.’[21]ຄົນທັງຫລາຍ
ຫງ່ຽງຫູຟັງຂ້ານ້ອຍ; ພວກເຂົາໄດ້ລໍຄອຍຂ້ານ້ອຍ; ແລະພວກເຂົາໄດ້ນິ່ງງຽບຢູ່ ເພື່ອຟັງຄຳສັ່ງສອນຂອງຂ້ານ້ອຍ.[22]ຫລັງ
ຈາກຖ້ອຍຄຳຂອງຂ້ານ້ອຍຖືກກ່າວແລ້ວ, ພວກເຂົາກໍບໍ່ເວົ້າອີກເລີຍ; ຄຳຂອງຂ້ານ້ອຍກໍຢອດລົງໄປເຫມືອນກັບນ້ຳທີ່ຖອກເທິງພວກເຂົາ.
[23]ພວກເຂົາໄດ້ລໍຄອຍຂ້ານ້ອຍເຫມືອນກັບຄອຍຖ້າສາຍຝົນ; ພວກເຂົາໄດ້ເປີດປາກຂອງຕົນກວ້າງເພື່ອດື່ມຖ້ອຍຄຳທັງຫລາຍຂອງຂ້ານ້ອຍ,
ເຫມືອນກັບພວກເຂົາຈະດື່ມນ້ຳຝົນຕົກທ້າຍຣະດູ.[24]ຂ້ານ້ອຍໄດ້ຍິ້ມໃຫ້ພວກເຂົາ ເມື່ອພວກເຂົາບໍ່ໄດ້ຄາດຫວັງສິ່ງນັ້ນ ພວກເຂົາກໍບໍ່
ປະຕິເສດແສງສະຫວ່າງແຫ່ງຫນ້າຂອງຂ້ານ້ອຍ.
[25]ຂ້ານ້ອຍໄດ້ກຳນົດທາງຂອງພວກເຂົາ ແລະນັ່ງເຫມືອນກັບເປັນຫົວຫນ້າຂອງພວກເຂົາ;
ຂ້ານ້ອຍໄດ້ມີຊີວິດຢູ່ເຫມືອນກັບກະສັດທີ່ຢູ່ໃນກອງທັບຂອງເຂົາ, ເຫມືອນກັບຜູ້ຫນຶ່ງທີ່ປອບໂຍນບັນດາຄົນໄວ້ທຸກ.

 generated on Tue Jun 17 19:01:42 2025

# 30

[1]ເວລານີ້ ຄົນເຫລົ່ານັ້ນທີ່ອາຍຸນ້ອຍກວ່າຂ້ອຍກັບບໍ່ໄດ້ເຮັດສິ່ງໃດນອກຈາກການເຍາະເຍີ້ຍຂ້ານ້ອຍ- ຄົນທີ່ຫນຸ່ມເຫລົ່ານີ້ທີ່ຂ້ານ້ອຍ
ຈະປະຕິເສດເຫລົ່າພໍ່ຂອງພວກເຂົາບໍ່ໃຫ້ເຮັດວຽກຄຽງຂ້າງພວກຫມາທີ່ເຝົ້າຝູງສັດຂອງຂ້ານ້ອຍ.[2]ອັນທີ່ຈິງແລ້ວ,
ກຳລັງແຫ່ງມືທັງຫລາຍຂອງພໍ່ຂອງພວກເຂົາ, ພວກຜູ້ຊາຍທີ່ມີກຳລັງໃນວັຍຜູ້ໃຫຍ່ຂອງພວກເຂົາໄດ້ສາບສູນໄປ
ສາມາດຊ່ວຍຂ້ານ້ອຍໄດ້ຫລາຍປານໃດ?[3]ພວກເຂົາຝ່າຍຜອມເພາະຄວາມຍາກຈົນ ແລະຫິວໂຫຍ; ພວກເຂົາ
ໄດ້ທົນທໍຣະມານທີ່ພື້ນດິນແຫ້ງແລ້ງກັນດານ ແລະຮ້າງເປົ່າຫວ່າງອັນມືດມິດ.

[4]ພວກເຂົາໄດ້ເກັບຜັກທ່າມກາງພຸ່ມໄມ້ ແລະເກັບໃບຂອງພຸ່ມໄມ້ຕ່າງໆ; ເກັບຮາກທັງຫລາຍຂອງຕົ້ນຊາກມາເປັນອາຫານ.[5]ພວກເຂົາໄດ້ຖືກຂັບ
ໄລ່ອອກຈາກທ່າມກາງປະຊາກອນຜູ້ທີ່ຮ້ອງຕາມຫລັງພວກເຂົາເຫມືອນກັບຄົນທີ່ຮ້ອງຕາມຫລັງໂຈນ.[6]ດັ່ງນັ້ນ ພວກເຂົາ
ຈຶ່ງໄດ້ອາໄສຢູ່ຕາມແຄມແມ່ນ້ຳຕ່າງໆ, ໃນຮູຕ່າງໆຢູ່ໃນແຜ່ນດິນແລະຫລືບຫີນຕ່າງໆ;
[7]ທ່າມກາງພຸ່ມໄມ້ທັງຫລາຍ ພວກເຂົາສົ່ງສຽງຮ້ອງເຫມືອນກັບພວກລວາ; ພາຍໃຕ້ພຸ່ມໄມ້ທັງຫລາຍ ພວກເຂົາໄດ້ລວມຕົວກັນ.[8]ພວກເຂົາໄດ້ເປັນ
ລູກຊາຍຂອງພວກຄົນໂງ່, ຄວາມຈິງຄື, ເປັນລູກຊາຍຂອງພວກທີ່ບໍ່ມີຊື່ສຽງ! ພວກເຂົາຖືກຂັບໄລ່ອອກຈາກດິນແດນດ້ວຍແສ້.
[9]ແຕ່ເວລານີ້ຕໍ່ບັນດາລູກຊາຍທັງຫລາຍຂອງພວກເຂົາ ຂ້ານ້ອຍໄດ້ກາຍເປັນເພງແຫ່ງການເຍາະເຍີ້ຍຂອງພວກເຂົາ; ຄວາມຈິງຄື, ຕອນນີ້
ຂ້ານ້ອຍເປັນຕົວຕະຫລົກສຳລັບພວກເຂົາ.[10]ພວກເຂົາທັງຫລາຍກຽດຊັງຂ້ານ້ອຍ ແລະຢືນຫ່າງໄກຈາກຂ້ານ້ອຍ; ພວກເຂົາຖົ່ມນ້ຳລາຍໃສ່ຫນ້າ
ຂອງຂ້ານ້ອຍ.[11]ເພາະພຣະເຈົ້າໄດ້ຊົງແກ້ສາຍທະນູຂອງຂ້ານ້ອຍ ແລະໄດ້ຊົງໃຫ້ຂ້ານ້ອຍຕົກຕ່ຳ
ແລະບັນດາຄົນເຫລົ່ານນັ້ນທີ່ໄດ້ເວົ້າສຽດສີຂ້ານ້ອຍໄດ້ຖິ້ມສິ່ງທີ່ຢຶດຖືທັງໃສ່ຕໍ່ຫນ້າຂອງຂ້ານ້ອຍ.
[12]ຂ້າງຂວາມືຂອງຂ້ານ້ອຍນັ້ນຝູງຊົນກໍລຸກຂຶ້ນ; ພວກເຂົາຂັບໄລ່ຂ້ານ້ອຍອອກໄປ ແລະຂຸດກອງດິນລວມກັນໄວ້ຕໍ່ສູ້ຂ້ານ້ອຍ.[13]ພວກເຂົາທຳລາຍ
ຫົນທາງຂອງຂ້ານ້ອຍ; ພວກເຂົາຢູ່ຄວາມພິນາດໄປທາງຫນ້າຂ້ານ້ອຍ, ພວກຄົນທີ່ບໍ່ມີຜູ້ໃດຕ້ານທານພວກເຂົາໄວ້ເລີຍ.
[14]ພວກເຂົາມາຕໍ່ສູ້ຂ້ານ້ອຍເຫມືອນກັບກອງທັບແລ່ນມາທາງປ່ອງກວ້າງຂອງກຳແພງເມືອງ; ໃນທ່າມກາງການທຳລາຍນັ້ນ
ພວກເຂົາກິ້ງຕົວເທິງຂ້ານ້ອຍ.[15]ຄວາມຢ້ານກົວຕົກມາເຫນືອຂ້ານ້ອຍ; ກຽດຂອງຂ້ານ້ອຍຖືກກຳຈັດອອກໄປເຫມືອນກັບມັນເປັນພຽງແຕ່ສາຍລົມ
ແລະຄວາມຈະເຣີນຮຸ່ງເຮືອງຂອງຂ້ານ້ອຍກໍຜ່ານໄປເຫມືອນກັບກ້ອນເມກ.
[16]ບັດນີ້ຊີວິດຂອງຂ້ານ້ອຍກຳລັງໄຫລອອກຈາກພາຍໃນຂ້ານ້ອຍໄປ; ວັນເວລາແຫ່ງຄວາມທຸກທໍຣະມານທັງຫລາຍຂອງຂ້ານ້ອຍ ໄດ້ຈັບ
ຕົວຂ້ານ້ອຍໄວ້ຈົນຫມັ້ນ.[17]ໃນຍາມກາງຄືນ ກະດູກທັງຫລາຍພາຍໃນຂ້ານ້ອຍຖືກເຈາະແທງ; ຄວາມເຈັບປວດທີ່ກັດກິນຂ້ານ້ອຍານັ້ນ
ເຮັດໃຫ້ຂ້ານ້ອຍບໍ່ຢຸດພັກເລີຍ.
[18]ກຳລັງອັນຍິ່ງໃຫຍ່ຂອງພຣະເຈົ້າ ໄດ້ຢຶດເສື້ອຜ້າຂອງຂ້ານ້ອຍ. ມັນໄດ້ຫໍ່ຫຸ້ມຂ້ານ້ອຍເຫມືອນກັບຄໍເສື້ອຮັດ
ຂ້ານ້ອຍ[19]ພຣະອົງໄດ້ຊົງໂຍນຂ້ານ້ອຍລົງໄປໃນຂີ້ຕົມ; ຂ້ານ້ອຍໄດ້ກາຍເປັນເຫມືອນຂີ້ຝຸ່ນ ແລະຂີ້ເຖົ່າໄຟ.
[20]ຂ້າແດ່ພຣະເຈົ້າ, ຂ້ານ້ອຍຮ້ອງທູນພຣະອົງ; ແຕ່ພຣະອົງບໍ່ໄດ້ຮັບຟັງຂ້ານ້ອຍ, ຂ້ານ້ອຍຢືນຂຶ້ນ ແລະພຣະອົງບໍ່ໄດ້ເບິ່ງ.[21]ພຣະອົງຊົງປ່ຽນແປງ
ແລະຊົງໂຫດຮ້າຍຕໍ່ຂ້ານ້ອຍ; ດ້ວຍກຳລັງແຫ່ງພຣະຫັດ ພຣະອົງຊົງຂົ່ມເຫັງຂ້ານ້ອຍ.
[22]ພຣະອົງຊົງຍົກຂ້ານ້ອຍຂຶ້ນເທິງສາຍລົມ ແລະຊົງເຮັດໃຫ້ລົມພັດຂ້ານ້ອຍໄປ; ພຣະອົງຊົງໂຍນຂ້ານ້ອຍໄປມາໃນພະຍຸ.[23]ເພາະຂ້ານ້ອຍຮູ້ວ່າ
ພຣະອົງຈະໃຫ້ຂ້ານ້ອຍໄປເຖິງຄວາມຕາຍເສຍ, ໄປເຖິງສູ່ບ່ອນທີ່ເປັນຈຸດຫມາຍປາຍທາງສຳລັບທຸກສິ່ງທີ່ມີຊີວິດ.
[24]ແຕ່ຈະບໍ່ມີໃຜທີ່ຍື່ນມືຂໍຄວາມຊ່ວຍເຫລືອ ເມື່ອເຂົາລົ້ມລົງຢ່າງນັ້ນບໍ? ບໍ່ມີໃຜທີ່ມີຄວາມທຸກຈະຮ້ອງຂໍຄວາມຊ່ວຍເຫລືອບໍ?[25]ຂ້ານ້ອຍບໍ່-
ໄດ້ຮ້ອງໄຫ້ ເພາະເຂົາທີ່ຕົກຢູ່ໃນຄວາມທຸກບໍ? ຂ້ານ້ອຍບໍ່ໄດ້ທຸກໂສກເພາະຄົນທີ່ຂັດສົນບໍ?[26]ເມື່ອຂ້ານ້ອຍໄດ້ຊອກຫາສິ່ງດີ,
ແລະຄວາມຊົ່ວໄດ້ເຂົ້າມາ; ເມື່ອຂ້ານ້ອຍໄດ້ລໍຄອຍຖ້າຄວາມສະຫວ່າງ, ຄວາມມືດກໍມາແທນທີ່.
[27]ຈິດໃຈຂອງຂ້ານ້ອຍ ຖືກເຮັດໃຫ້ທຸກຍາກ ແລະບໍ່ໄດ້ຢຸດພັກ; ວັນທັງຫລາຍແຫ່ງຄວາມເຈັບປວດໄດ້ມາເຫນືອຂ້ານ້ອຍ.
[28]ຂ້ານ້ອຍໄດ້ໄປເຫມືອນກັບຄົນທີ່ກຳລັງຢູ່ໃນຄວາມມືດ, ແຕ່ບໍ່ແມ່ນເພາະດວງຕາເວັນ; ຂ້ານ້ອຍຢືນຂຶ້ນໃນທີ່ຊຸມນຸມ-
ຊົນ ແລະຮ້ອງຂໍຄວາມຊ່ວຍເຫລືອ.[29]ຂ້ານ້ອຍເປັນພີ່ນ້ອງຂອງຝູງຫມາໄນ, ເປັນເພື່ອນຂອງພວກນົກກະຈອກເທດ.
[30]ຜິວຫນັງຂ້ານ້ອຍເປັນສີດຳ ແລະຫລຸດລ່ວງຈາກຂ້ານ້ອຍ; ກະດູກຂອງຂ້ານ້ອຍຖືກເຜົາດ້ວຍຄວາມຮ້ອນ.[31]ເພາະສະນັ້ນ ສຽງພິນຄູ່
ຂອງຂ້ານ້ອຍ ຈຶ່ງຫັນໄປສູ່ເພງໄວ້ທຸກ, ສຽງຂຸ່ຍຂອງຂ້ານ້ອຍບັນເລງເພງສຳລັບຄົນເຫລົ່ານັ້ນທີ່ຮ້ອງໄຫ້ຄ້ຳຄວນ.

 generated on Tue Jun 17 19:01:42 2025

31 [1]ຂ້າໄດ້ເຮັດສັນຍາກັບດວງຕາຂອງຂ້ານ້ອຍ; ແລ້ວຂ້ານ້ອຍຄວນຈະເບິ່ງຍິງບໍຣິສຸດດ້ວຍໃຈປາຖະຫນາຢ່າງນັ້ນບໍ?
[2]ເພາະສິ່ງໃດທີ່ເປັນສ່ວນແບ່ງຈາກພຣະເຈົ້າເບື້ອງບົນ ເປັນມໍຣະດົກຈາກອົງຜູ້ຊົງຣິດທານຸພາບເທິງທີ່ສູງບໍ?

[3]ຂ້ານ້ອຍຄິດວ່າເຫດຫານເລວຮ້າຍມີໄວ້ສໍາລັບຄົນອະທັມ ແລະຄວາມພິນາດທີ່ມີໄວ້ສໍາລັບຄົນເຮັດຜິດ.[4]ພຣະເຈົ້າບໍ່ໄດ້ຊົງ-
ຮູ້ເຫັນທາງທັງຫລາຍຂອງຂ້ານ້ອຍ ແລະນັບບາດກ້າວທັງສິ້ນຂອງຂ້ານ້ອຍຫລື?
[5]ຖ້າຫາກຂ້ານ້ອຍໄດ້ເດີນໄປກັບຄວາມຂີ້ຕົວະ, ຖ້າຫາກຕີນຂອງຂ້ານ້ອຍເລັ່ງໄປສູ່ການຫລອກລວງ.[6]ຂໍໃຫ້ພຣະເຈົ້າໄດ້ຮັບການຊັ່ງຢ່າງສົມດຸນ
ເພື່ອ ພຣະອົງຈະຊົງຮູ້ເຖິງຄວາມຊື່ສັດຂອງຂ້ານ້ອຍ.
[7]ຖ້າຫາກຕີນຂ້ານ້ອຍຫັນອອກໄປຈາກທາງທີ່ຖືກຕ້ອງ, ຖ້າຫາກຈິດໃຈຂອງຂ້ານ້ອຍໄດ້ຕິດຕາມດວງຕາຂອງຂ້ານ້ອຍ,
ຖ້າຫາກຈຸດໃດໆໄດ້ເຮັດໃຫ້ມືຂອງຂ້ານ້ອຍມີມົນທິນ,[8]ແລ້ວຂໍໃຫ້ຂ້ານ້ອຍຫວ່ານ ແລະມີອີກຄົນມາກິນເສຍ; ອັນທີ່ຈິງ, ຂໍໃຫ້
ການເກັບກ່ຽວຖືກຖອນອອກໄປຈາກທົ່ງນາຂອງຂ້ານ້ອຍ.
[9]ຖ້າຫາກຈິດໃຈຂອງຂ້ານ້ອຍໄດ້ຖືກຫລອກລວງໂດຍຜູ້ຍິງຄົນຫນຶ່ງ, ຖ້າຫາກຂ້ານ້ອຍໄດ້ດັກຈອບລີ້ຢູ່ທີ່ ນອກປະຕູເຮືອນ
ຂອງເພື່ອນບ້ານຂ້ານ້ອຍ.[10]ແລ້ວຂໍໃຫ້ເມຍຂອງຂ້ານ້ອຍ ຮັບໃຊ້ຄົນອື່ນ, ໃຫ້ຊາຍອື່ນໆນອນນໍານາງ.
[11]ເພາະນັ້ນຈະເປັນອາຊະຍາກັມຮ້າຍແຮງ, ແທ້ຈິງແລ້ວ, ມັນຈະເປັນອາຊະຍາກັມທີ່ຖືກໂທດ ໂດຍຜູ້ພິພາກສາທັງຫລາຍ.
[12]ເພາະນັ້ນເປັນໄຟທີ່ເຜົາຜານທຸກສິ່ງ ເພື່ອແດນຄົນຕາຍ ແລະທີ່ເຜົາໄຫມ້ການເກັບກ່ຽວທຸກຢ່າງຂອງຂ້ານ້ອຍ.
[13]ຖ້າຫາກຂ້ານ້ອຍໄດ້ເມີນເສີຍຕໍ່ຄໍາຮ້ອງຂໍຄວາມຍຸຕິທັມ ຈາກຄົນຮັບໃຊ້ຊາຍ ແລະຄົນຮັບໃຊ້ຍິງຂອງຂ້ານ້ອຍ ເມື່ອພວກເຂົາໄດ້ໂຕ້ຖຽງກັບ
ຂ້ານ້ອຍ,[14]ແລ້ວສິ່ງທີ່ຂ້ານ້ອຍຈະເຮັດເມື່ອພຣະເຈົ້າຊົງລຸກຂຶ້ນກ່າວໂທດຂ້ານ້ອຍຫລື? ເມື່ອພຣະອົງມາຕັດສິນຂ້ານ້ອຍ,
ຂ້ານ້ອຍຈະຕອບພຣະອົງຢ່າງໃດ?[15]ຄົນທີ່ໄດ້ສ້າງຂ້ານ້ອຍໃນທ້ອງແມ່ ກໍບໍ່ໄດ້ປັ້ນພວກເຂົາດ້ວຍຫລື?
ບໍ່ແມ່ນຜູ້ດຽວກັນນີ້ທີ່ໄດ້ປັ້ນພວກເຮົາທຸກຄົນໃນທ້ອງນັ້ນ?
[16]ຖ້າຫາກ ຂ້ານ້ອຍບໍ່ເຄີຍປະຕິເສດຄົນຍາກຈົນຈາກຄວາມປາຖະຫນາຂອງພວກເຂົາ, ຫລືຖ້າ ຂ້ານ້ອຍໄດ້ເປັນເຫດໃຫ້ດວງຕາທັງຫລາຍຂອງ
ແມ່ຫມ້າຍມົວລົງໄປຈາກການຮ້ອງໄຫ້,[17]ຫລືຖ້າ ຂ້ານ້ອຍໄດ້ກິນອາຫານຂອງ ຂ້ານ້ອຍຕາມລໍາພັງ ແລະບໍ່ເຄີຍໃຫ້ບັນດາຄົນເຫລົ່ານັ້ນທີ່ກໍາພ້າ
ພໍ່ມາກິນນໍາ[18]ເພາະຈາກວັຍຫນຸ່ມ ຂອງ ຂ້ານ້ອຍລູກກໍາພ້າໄດ້ເຕີບໂຕຂຶ້ນພ້ອມກັບ ຂ້ານ້ອຍເຫມືອນກັບ ຂ້ານ້ອຍເປັນພໍ່ຂອງເຂົາ, ແລະ
ຂ້ານ້ອຍໄດ້ຊີ້ນໍາແມ່ຂອງເຂົາ ຄືຍິງຫມ້າຍຄົນຫນຶ່ງຈາກທ້ອງແມ່ຂອງ ຂ້ານ້ອຍເອງ.
[19]ຖ້າ ຂ້ານ້ອຍໄດ້ພົບເຫັນຄົນໃດຕາຍເພາະຂາດເສື້ອຜ້າ, ຫລືຖ້າ ຂ້ານ້ອຍໄດ້ເຫັນຄົນຂັດສົນບໍ່ມີເສື້ອຜ້າໃສ່;
[20]ຖ້າຈິດໃຈຂອງເຂົາບໍ່ໄດ້ອວຍພອນ ຂ້ານ້ອຍເພາະເຂົາບໍ່ໄດ້ຮັບການເຮັດໃຫ້ອົບອຸ່ນດ້ວຍຂົນແກະຂອງ ຂ້ານ້ອຍ,[21]ຖ້າຫາກ ຂ້ານ້ອຍຍົກມືຂອງ
ຂ້ານ້ອຍຕໍ່ສູ້ຄົນທີ່ກໍາພ້າພໍ່ເພາະ ຂ້ານ້ອຍໄດ້ເຫັນຜູ້ສະຫນັບສະຫນູນຂອງ ຂ້ານ້ອຍທີ່ປະຕູເມືອງ ກໍຂໍຈົ່ງກ່າວຫາ ຂ້ານ້ອຍ!
[22]ຖ້າ ຂ້ານ້ອຍໄດ້ເຮັດສິ່ງຕ່າງໆເຫລົ່ານີ້, ດັ່ງນັ້ນຂໍໃຫ້ໄຫລ່ຂອງຂ້ານ້ອຍຫລຸດອອກຈາກບ່າຂອງ ຂ້ານ້ອຍເສຍ, ແລະຂໍໃຫ້ລໍາແຂນຂອງ
ຂ້ານ້ອຍແຕກຫັກຈາກຂໍ້ຕໍ່ຂອງມັນ.[23]ເພາະ ຂ້ານ້ອຍໄດ້ຢ້ານກົວການທໍາລາຍຈາກພຣະເຈົ້າຢ່າງຫລາຍ; ເພາະພຣະບາຣະມີຂອງພຣະອົງ,
ຂ້ານ້ອຍບໍ່ສາມາດໄປເຮັດສິ່ງຕ່າງໆເຫລົ່ານັ້ນໄດ້.
[24]ຖ້າ ຂ້ານ້ອຍໄດ້ເຮັດຄໍາເປັນຄວາມຫວັງຂອງ ຂ້ານ້ອຍ, ແລະຖ້າ ຂ້ານ້ອຍໄດ້ເວົ້າຕໍ່ຄໍາເນື້ອດີວ່າ, ' ເຈົ້າເປັນຄວາມຫມັ້ນໃຈຂອງ ຂ້ານ້ອຍ'[25]ຖ້າ
ຂ້ານ້ອຍໄດ້ຊື່ນຊົມຍິນດີເພາະຄວາມຄົ່ງມັ່ງຄັ່ງຂອງ ຂ້ານ້ອຍນັ້ນຍິ່ງໃຫ່ຍ, ເພາະມືຂອງ ຂ້ານ້ອຍໄດ້ຮັບຊັບສົມບັດຫລວງຫລາຍ ກໍຈົ່ງກ່າວຫາ
ຂ້ານ້ອຍ!
[26]ຖ້າຫາກຂ້ານ້ອຍໄດ້ເຫັນດວງອາທິດເມື່ອມັນສ່ອງແສງ, ຫລືດວງຈັນດໍາເນີນໃນຄວາມສະຫວ່າງຂອງມັນ,[27]ເພື່ອວ່າປາກຂອງ
ຂ້ານ້ອຍໄດ້ຈູບມືຂອງ ຂ້ານ້ອຍໃນການນະມັດສະການສິ່ງເຫລົ່ານັ້ນ-[28]ນີ້ກໍຈະເປັນຄວາມຄວາມຜິດທາງອາຍາຮ້າຍແຮງທີ່ຈະຕ້ອງຖືກ
ໄດ້ຮັບໂທດໂດຍຜູ້ພິພາກສາທັງຫລາຍ, ເພາະຂ້ານ້ອຍຈະປະຕິເສດພຣະເຈົ້າຜູ້ຊົງຢູ່ເບື້ອງເທິງ.
[29]ຖ້າ ຂ້ານ້ອຍໄດ້ຊື່ນຊົມຍິນດີຕໍ່ຫາຍະນະທີ່ເກີດກັບຄົນທີ່ກຽດຊັງ ຂ້ານ້ອຍຫລື
ສະແດງຄວາມຍິນດີກັບຕົວເອງເມື່ອຄວາມພິນາດຕາມທັນພວກເຂົາ, ກໍຈົ່ງກ່າວຫາ ຂ້ານ້ອຍເຖີດ![30]ອັນທີ່ຈິງແລ້ວ, ຂ້ານ້ອຍບໍ່ເຄີຍ
ແມ້ແຕ່ອະນຸຍາດໃຫ້ປາກຂອງ ຂ້ານ້ອຍເຮັດບາບດ້ວຍການຂໍຊີວິດຂອງເຂົາພ້ອມກັບຄໍາສາບແຊ່ງ.
[31]ຖ້າຫາກມະນຸດທັງຫລາຍຢູ່ໃນເຕັນຂອງ ຂ້ານ້ອຍບໍ່ເຄີຍເວົ້າວ່າ, ' ໃຜສາມາດພົບຄົນຫນຶ່ງທີ່ບໍ່ໄດ້ອີ່ມຫນໍາດ້ວຍອາຫານຂອງໂຢບຫລື?
[32](ແມ້ແຕ່ຄົນຕ່າງຊາດກໍບໍ່ເຄີຍຕ້ອງພັກຢູ່ທີ່ເດີ່ນເມືອງ, ເພາະ ຂ້ານ້ອຍໄດ້ເປີດປະຕູຂອງ ຂ້ານ້ອຍໃຫ້ກັບນັກເດີນທາງສະເຫມີ)
ແລະຖ້າບໍ່ເປັນຢ່າງນັ້ນແລ້ວ. ກໍຂໍຈົ່ງກ່າວຫາ ຂ້ານ້ອຍເຖີດ.
[33]ເຫມືອນກັບມະນຸດທັງຫລາຍ, ຖ້າ ຂ້ານ້ອຍໄດ້ປິດບັງບາບຂອງ ຂ້ານ້ອຍ ໂດຍການເຊື່ອງຄວາມຜິດ ຂ້ານ້ອຍພາຍໃນເສື້ອຄຸມຂອງ ຂ້ານ້ອຍ.
[34](ເພາະ ຂ້ານ້ອຍໄດ້ຢ້ານກົວຝູງຊົນໃຫ່ຍເພາະການດູຫມິ່ນຄອບຄົວທັງຫລາຍ ເຮັດໃຫ້ ຂ້ານ້ອຍຢ້ານກົວ ເພື່ອຂ້ານ້ອຍໄດ້ມິດງຽບ
ແລະຈະບໍ່ອອກໄປດ້ານນອກ), ກໍຈົ່ງກ່າວຫາ ຂ້ານ້ອຍເຖີດ.
[35]ໂອ, ຖ້າພຽງແຕ່ ຂ້ານ້ອຍໄດ້ມີໃຜບາງຄົນຟັງສຽງຂອງຂ້ານ້ອຍ! ເບິ່ງແມ, ນີ້ຄືລາຍມືຊື່ຂ້ານ້ອຍ; ຂໍໃຫ້ພຣະເຈົ້າຜູ້ມີຣິດທານຸພາບຊົງຕອບ
ຂ້ານ້ອຍ! ຖ້າພຽງແຕ່ມີຂໍ້ກ່າວຫາທີ່ປໍລະປັກຂອງຂ້ານ້ອຍໄດ້ບັນທຶກເອົາໄວ້.[36]ແນ່ນອນທີ່ ຂ້ານ້ອຍຈະແບກມັນເທິງບ່າຂອງ
ຂ້ານ້ອຍຢ່າງເປີດເຜີຍ; ຂ້ານ້ອຍຈະໃສ່ໄວ້ເຫມືອນກັບເປັນມົງກຸດ.[37]ຂ້ານ້ອຍຈະປະກາດຕໍ່ພຣະ-
ເຈົ້າເຫມືອນລາຍງານເຖິງບາດກ້າວທັງຫລາຍຂອງ ຂ້ານ້ອຍ. ເປັນເຫມືອນເຈົ້າຊາຍທີ່ມີຄວາມຫມັ້ນໃຈ ຂ້ານ້ອຍຈະຂຶ້ນໄປຫາພຣະອົງ.
[38]ຖ້າຫາກທີ່ດິນຂອງ ຂ້ານ້ອຍເຄີຍຮ້ອງຕໍ່ສູ້ ຂ້ານ້ອຍ ແລະຮ່ອງດິນທັງຫລາຍຂອງມັນຮ້ອງໄຫ້ດ້ວຍກັນ.[39]ຖ້າ ຂ້ານ້ອຍໄດ້
ກິນການເກັບກ່ຽວຂອງມັນ ໂດຍບໍ່ຈ່າຍລາຄາ ຫລືໄດ້ເປັນເຫດໃຫ້ພວກເຈົ້າຂອງມັນສູນເສຍຊີວິດຂອງພວກເຂົາ,[40]ແລ້ວຂໍໃຫ້
ຫນາມທັງຫລາຍເຕີບໂຕແທນທີ່ສາລີ ແລະຫຍ້າແທນເຂົ້າບາເລ." ຖ້ອຍຄໍາທັງຫລາຍຂອງໂຢບກໍຈົບລົງ.

 generated on Tue Jun 17 19:01:42 2025

32 1ດັ່ງນັ້ນຊາຍສາມຄົນຈຶ່ງໄດ້ຢຸດຕອບໂຢບເພາະເຂົາເປັນຄົນຊອບທັມໃນສາຍຕາຂອງລາວເອງ.2ແລ້ວເອລີຮູ ລູກຊາຍບາຣາເກນຄົນບູເຊ,
ຄອບຄົວຂອງລາມ; ກໍຮ້ອນຮົນໄປດ້ວຍຄວາມໂກດ. ລາວໂກດຮ້າຍໂຢບ ເພາະລາວອ້າງວ່າຕົນເອງຖືກຕ້ອງແທນທີ່ຈະເປັນພຣະເຈົ້າ.

3ເອລີຮູ ມີຄວາມໂກດຕໍ່ເພື່ອນທັງຫລາຍທັງສາມຄົນດ້ວຍ ເພາະພວກເຂົາບໍ່ມີຄຳຕອບໃຫ້ກັບໂຢບ, ແລະພວກເຂົາກໍຍັງຄົງໄດ້ຕຳໜິໂຢບ.4ເອລີ-
ຮູໄດ້ລໍຄອຍທີ່ຈະເວົ້າກັບໂຢບ ເພາະຜູ້ຊາຍມີອາຍຸກວ່າລາວ.5ແຕ່ເມື່ອເອລີຮູເຫັນວ່າບໍ່ມີຄຳຕອບໃດ ຈາກປາກຊາຍທັງສາມເຫລົ່ານັ້ນແລ້ວ,
ຄວາມໂກດຂອງລາວຈຶ່ງພຸ່ງຂຶ້ນ.
6ແລະເອລີຮູ ລູກຊາຍບາຣາເກນ ຄົນບູເຊ ກ່າວວ່າ, “ ຂ້ານ້ອຍເປັນຄົນໜຸ່ມ ແລະພວກທ່ານທັງຫລາຍເປັນຜູ້ອາວຸໂສ. ດ້ວຍເຫດນັ້ນ
ຂ້ານ້ອຍຈຶ່ງງຽບ ແລະບໍ່ກ້າບອກພວກທ່ານເຖິງຄວາມຄິດເຫັນຂອງຂ້ານ້ອຍ.7‘ ວັນທັງຫລາຍທີ່ຍາວນານສົມຄວນເວົ້າ; ປີທັງຫລາຍເພີ່ມຂຶ້ນ
ສົມຄວນສອນສະຕິປັນຍາ’.
8ແຕ່ມີຈິດວິນຍານດວງໜຶ່ງໃນມະນຸດ; ລົມຫາຍໃຈຂອງອົງຊົງຣິດທານູພາບ ປະມານຄວາມເຂົ້າໃຈໃຫ້ແກ່ລາວ.9ບໍ່ແມ່ນພຽງແຕ່ຄົນທີ່ຍິ່ງໃຫ່ຍ
ເທົ່ານັ້ນທີ່ເປັນຄົນສະຫລາດ ຫລືບໍ່ພຽງແຕ່ຄົນມີອາຍຸສູງເທົ່ານັ້ນທີ່ເຂົ້າໃຈຄວາມຍຸຕິທັມ.10ເພາະສະນັ້ນ ຂ້ອຍຈຶ່ງເວົ້າພັບພວກທ່ານວ່າ ‘ຂໍຈົ່ງຟັງ
ຂ້ອຍ; ຂ້ອຍຈະບອກເຈົ້າໃຫ້ເຫັນເຖິງຄວາມຮູ້ຂອງຂ້ອຍ.’
11ເບິ່ງແມ ຂ້າໄດ້ຄອຍຖ້າຟັງຄຳທັງຫລາຍຂອງພວກເຈົ້າທັງຫລາຍ; ຂ້ານ້ອຍໄດ້ຟັງຄຳໂຕ້ຖຽງທັງຫລາຍຂອງພວກທ່ານໃນຂະນະທີ່ພວກ
ທ່ານກຳລັງຄິດກັບສິ່ງທີ່ພວກທ່ານຈະເວົ້າອັນໃດ.12ແທ້ຈິງແລ້ວ, ຂ້ານ້ອຍໄດ້ຕັ້ງໃຈຟັງພວກທ່ານ, ເບິ່ງແມ, ບໍ່ມີຜູ້-
ໃດໃນພວກກທ່ານທີ່ສາມາດເຮັດໃຫ້ໂຢບສຳນຶກ ຫລືບໍ່ມີໃຜທີ່ຈະຕອບສະໜອງຖ້ອຍຄຳທັງຫລາຍຂອງໂຢບໄດ້.
13ຈົ່ງລະວັງທີ່ຈະບໍ່ເວົ້າວ່າ, ‘ເຮົາໄດ້ພົບສະຕິປັນຍາ!'  ພຣະເຈົ້າຈະຊົງປາບໂຢບໃຫ້ພ່າຍແພ້; ໃນເມື່ອມະນຸດບໍ່ສາມາດເຮັດໄດ້.14ເພາະໂຢບບໍ່ໄດ້
ກ່າວຖ້ອຍຄຳທັງຫລາຍຂອງລາວຕໍ່ສູ້ຂ້ານ້ອຍ, ດັ່ງນັ້ນຂ້ານ້ອຍຈະບໍ່ຕອບລາວດ້ວຍຖ້ອຍຄຳທັງຫລາຍຂອງພວກທ່ານ.
15ຊາຍທັງສາມຄົນເຫລົ່ານີ້ ຖືກເຮັດໃຫ້ເປັນໃບ້ແລ້ວ, ພວກເຂົາບໍ່ສາມາດຕອບໂຢບໄດ້ອີກຕໍ່ໄປ.
ພວກເຂົາບໍ່ມີຖ້ອຍຄຳແມ່ນແຕ່ຄຳດຽວທີ່ຈະເວົ້າ.16ຂ້ານ້ອຍສົມຄວນທີ່ຈະຄອຍຖ້າບໍ ເພາະພວກເຂົາບໍ່ເວົ້າ, ເພາະພວກເຂົາຢືນນິ່ງງຽບ ແລະບໍ່
ຕອບອີກແລ້ວຢ່າງນັ້ນບໍ?
17ບໍ່ເລີຍ, ຂ້ານ້ອຍຈະຕອບໃນສ່ວນຂອງຂ້ານ້ອຍດ້ວຍເຊັ່ນດຽວ, ຂ້ານ້ອຍຈະບອກພວກເຂົາເຖິງຄວາມຮູ້ຂອງຂ້ານ້ອຍ.18ເພາະ
ຂ້ານ້ອຍເຕັມໄປດ້ວຍຖ້ອຍຄຳຕ່າງໆ; ວິນຍານພາຍໃນຕົວຂ້ານ້ອຍບັງຄັບຂ້ານ້ອຍ.19ເບິ່ງແມ,
ໜ້າເອິກຂອງຂ້ານ້ອຍກໍເຫມືອນກັບເຫລົ້າອະງຸ່ນໝັກ ທີ່ບໍ່ມີຊ່ອງລະບາຍອາກາດ; ເຫມືອນກັບ ຖົງໜັງເຫລົ້າອະງຸ່ນໃຫມ່, ມັນພ້ອມຈະລະ-
ເບີດຢູ່ແລ້ວ.
20ຂ້ານ້ອຍຈະເວົ້າເພື່ອ ຂ້ານ້ອຍຈະໄດ້ມີຄວາມສົດຊື່ນ; ຂ້ານ້ອຍຈະເປີດຮີມປາກຂອງຂ້ານ້ອຍ ແລະຕອບ.21ຂ້ານ້ອຍຈະບໍ່ສະແດງ
ຄວາມລຳອຽງ; ຫລືຂ້ານ້ອຍຈະບໍ່ໄປປະຈົບປະແຈງຜູ້ໃດ22ເພາະຂ້ານ້ອຍບໍ່ຮູ້ຈະປະຈົບປະແຈງແນວໃດ; ຖ້າຫາກຂ້ານ້ອຍເຮັດຢ່າງນັ້ນ,
ບໍ່ຊ້າພຣະເຈົ້າຜູ້ສ້າງຂອງຂ້ານ້ອຍ ກໍຊົງເອົາຂ້ານ້ອຍໄປ.


generated on Tue Jun 17 19:01:42 2025

33 1ດັ່ງນັ້ນເວລານີ້, ໂຢບເອີຍ, ຢ່າງໃດກໍຕາມ ຂໍຟັງຄຳຂອງຂ້ອຍ ຂໍໃຫ້ຟັງຄຳເວົ້າຂອງຂ້ອຍ; ແລະຟັງຖ້ອຍຄຳທັງຫມົດຂອງຂ້ອຍ. 2ເບິ່ງແມ,
ບັດນີ້ຂ້ອຍໄດ້ອ້າປາກຂອງຂ້ອຍ; ລີ້ນຂອງຂ້ອຍພາຍໃນປາກຂອງຂ້ອຍ. 3ຖ້ອຍຄຳຂອງຂ້ານ້ອຍທັງຫລາຍສະແດງຄວາມທ່ຽງທັມຂອງຈິດ-
ໃຈ; ແລະຮີມປາກຂອງຂ້ານ້ອຍຈະກ່າວຄວາມຮູ້ຢ່າງຈິງໃຈ.

4ພຣະວິນຍານຂອງພຣະເຈົ້າໄດ້ສ້າງຂ້າພະເຈົ້າ ແລະລົມຫາຍໃຈຂອງອົງຜູ້ມີຣິດທານຸພາບໄດ້ຊົງໃຫ້ຊີວິດໃຫ້ແກ່ຂ້າພະເຈົ້າ. 5ຂໍຕອບຂ້າພະ-
ເຈົ້າເຖີດ, ຖ້າທ່ານສາມາດ, ຕັ້ງຖ້ອຍຄຳທັງຫລາຍຂອງທ່ານ ຕໍ່ຫນ້າຂ້າພະເຈົ້າ ແລະຢືນຂຶ້ນ.
6ເບິ່ງແມ, ຂ້ານ້ອຍເປັນເຫມືອນຢ່າງທີ່ທ່ານເປັນໃນສາຍຕາຂອງພຣະເຈົ້າ; ຂ້ານ້ອຍໄດ້ຖືກປັ້ນຮ່າງຈາກດິນຄືກັນ. 7ເບິ່ງແມ, ຄວາມຢ້ານກົວຂ້າ-
ພະເຈົ້າບໍ່ໄດ້ເຮັດໃຫ້ທ່ານຢ້ານກົວ; ຫລືຄວາມກົດດັນຂອງຂ້ານ້ອຍກໍຈະບໍ່ເຮັດໃຫ້ທ່ານຫນັກຫນ່ວງເກີນໄປ.
8ທ່ານເວົ້າໃຫ້ຂ້າພະເຈົ້າຟັງ ແລະຂ້າພະເຈົ້າໄດ້ຍິນສຽງຖ້ອຍຄຳກ່າວທັງຫລາຍຂອງທ່ານວ່າ, 9'ຂ້າພະເຈົ້າເປັນຄົນບໍຣິສຸດ ແລະປາສະຈາກການ
ລະເມີດ; ຂ້າພະເຈົ້າເປັນຄົນບໍຣິສຸດ, ແລະ ບໍ່ມີຄວາມບາບໃນຂ້າພະເຈົ້າເລີຍ.
10ເບິ່ງແມ, ພຣະອົງຊົງຫາໂອກາດໂຈມຕີຂ້ານ້ອຍ; ພຣະອົງຊົງເຫັນຂ້ານ້ອຍເປັນສັດຕຣູກັບພຣະອົງ. 11ພຣະອົງຊົງວາງໄດ້ເອົາມັດຕີນຂອງຂ້າ-
ນ້ອຍໄວ້; ແລະພຣະອົງໄດ້ເຝົ້າເບິ່ງທາງຂອງຂ້ານ້ອຍທັງຫມົດ,' 12ເບິ່ງແມ, ໃນເລື່ອງນີ້ ທ່ານບໍ່ຍຸຕິທັມເລີຍ -ຂ້າພະເຈົ້າຈະຕອບທ່ານ, ເພາະພຣະ-
ເຈົ້າຍິ່ງໃຫຍ່ກວ່າມະນຸດ.
13ເປັນຫຍັງທ່ານຕ້ອງລຳບາກໃນການຕໍ່ສູ້ກັບພຣະອົງຫລື? ພຣະອົງບໍ່ໄດ້ຊົງລາຍງານສິ່ງໃດໆ ທີ່ພຣະອົງເຮັດເລີຍ. 14ເພາະພຣະເຈົ້າຊົງກ່າວ
ເທື່ອຫນຶ່ງ-ແມ່ນ, ສອງເທື່ອ, ໂດຍຜ່ານ ທາງມະນຸດທີ່ບໍ່ຮູ້ເຫັນໄດ້. 15ໃນຄວາມຝັນຫນຶ່ງ, ໃນນິມິດຫນຶ່ງຍາມກາງຄືນ, ເມື່ອມະນຸດນອນຫລັບສະ-
ນິດ, ສະຫງົບຢູ່ເທິງບ່ອນນອນນັ້ນ-
16ແລ້ວພຣະອົງໄດ້ເປີດຫູຂອງມະນຸດ, ແລະສັ່ນຂວັນພວກເຂົາດ້ວຍຄວາມຢ້ານກົວ, 17ເພື່ອດຶງມະນຸດກັບມາຈາກເປົ້າຫມາຍ
ຄວາມບາບຂອງລາວ, ແລະຕັດຄວາມຈອງຫອງອອກເສຍຈາກລາວ. 18ພຣະເຈົ້າຊົງໄດ້ຍຶດຊີວິດຂອງມະນຸດໄວ້ຈາກຂຸມຝັງສົບຄົນຕາຍ, ແລະຊີ-
ວິດຂອງພວກເຂົາໄວ້ຈາກຂວ້າມໄປສູ່ຄວາມຕາຍ.
19ມະນຸດຍັງຖືກລົງໂທດດ້ວຍຄວາມເຈັບປວດເທິງຕຽງນອນຂອງພວກເຂົາ, ແລະດ້ວຍຄວາມເຈັບປວດຢ່າງສາຫັດໃນກະດູກຕ່າງໆຂອງລາວ.
20ເພື່ອວ່າຊີວິດຂອງລາວຈະເບື່ອອາຫານ, ແລະຈິດໃຈຂອງລາວຈະເບື່ອອາຫານທີ່ແຊບ.
21ເນື້ອຫນັງຂອງລາວຖືກທຳລາຍໄປເພື່ອມັນຈະບໍ່ສາມາດຖືກເບິ່ງບໍ່ເຫັນ; ກະດູກທັງຫລາຍຂອງລາວ, ທີ່ບໍ່ເຄີຍຍິ່ງເຫັນ, ບັດນີ້ກໍຍື່ນອອກມາ.
22ອັນທີ່ຈິງແລ້ວ, ຈິດວິນຍານຂອງລາວເຂົ້າໄປໃກ້ຂຸມຝັງສົບຄົນຕາຍ, ຊີວິດຂອງລາວກໍໃກ້ກັບ ຄົນເຫລົ່ານັ້ນທີ່ປາຖະຫນາຈະທຳລາຍນັ້ນ.
23ແຕ່ຖ້າມີເທວະດາອົງຫນຶ່ງຜູ້ສາມາດເປັນຄົນກາງສຳລັບລາວ. ຄົນກາງຄົນຫນຶ່ງ, ຜູ້ມາຈາກທ່າມກາງເທວະດານັບພັນໆ
ເພື່ອສະແດງໃຫ້ລາວເຫັນສິ່ງຖືກຕ້ອງທີ່ຈະເຮັດ. 24ແລະຖ້າເທວະດານັ້ນກະຣຸນາຕໍ່ລາວ ແລະທູນຕໍ່ພຣະເຈົ້າວ່າ, 'ຂໍຈົ່ງຊ່ວຍຄົນນີ້ໃຫ້ລອດພົ້ນ
ຈາກການລົງໄປຍັງຂຸມຝັງສົບຄົນຕາຍ; ຂ້ານ້ອຍໄດ້ພົບຄ່າໄຖ່ສຳລັບລາວ,'
25ແລ້ວເນື້ອຫນັງຂອງລາວຈະສົດຊື່ນຂຶ້ນຍິ່ງກວ່າເດັກເນື້ອຫນັງເດັກ; ລາວຈະຫັນກັບໄປສູ່ກຳລັງຄືຕອນຍັງຫນຸ່ມຂອງລາວ. 26ລາວຈຶ່ງຈະອະທິ-
ຖານຕໍ່ພຣະເຈົ້າ ແລະພຣະອົງຈະຊົງກະຣຸນາ ເພື່ອວ່າລາວຈະເຫັນພຣະພັກພຣະອົງດ້ວຍຄວາມຊື່ນຊົມຍິນດີ. ພຣະເຈົ້າ
ຈະປຣະທານຊັຍຊະນະຂອງພຣະອົງໃຫ້ແກ່ຄົນນັ້ນ.
27ແລ້ວຄົນນັ້ນຈະຮ້ອງເພງຕໍ່ຫນ້າຄົນອື່ນ ແລະເວົ້າວ່າ, 'ຂ້ອຍບາບແລ້ວ ແລະເຫັນຜິດເປັນຖືກ, ແຕ່ຄວາມບາບຂອງຂ້ານ້ອຍໄດ້ຮັບການລົງໂທດ.
28ພຣະເຈົ້າໄດ້ຊົງຊ່ວຍໄຖ່ຈິດວິນຍານຂອງຂ້າພະເຈົ້າຈາກການລົງໄປສູ່ຂຸມຝັງສົບຄົນຕາຍ ແລະຊີວິດຂອງຂ້ານ້ອຍ ຍັງຄົງເຫັນຄວາມສະ-
ຫວ່າງ.'
29ເບິ່ງແມ, ພຣະເຈົ້າຊົງກະທຳສິ່ງເຫລົ່ານີ້ກັບຄົນຫນຶ່ງສອງຄັ້ງ, ແມ່ນ, ແມ້ເຖິງສາມຄັ້ງ, 30ເພື່ອຈະນຳຈິດວິນຍານຂອງລາວມາຈາກຂຸມຝັງສົບຄົນ
ຕາຍນັ້ນ, ເພື່ອວ່າລາວຈະໄດ້ເຂົ້າໃຈດ້ວຍຄວາມສະຫວ່າງແຫ່ງຊີວິດ.
31ຂໍຕັ້ງໃຈເຖີດ, ໂຢບ, ແລະຂໍຟັງຂ້ານ້ອຍຈະເວົ້າ; ຂໍຈົ່ງງຽບ ແລະຂ້ານ້ອຍຈະເວົ້າ, 32ຖ້າຫາກທ່ານມີສິ່ງໃດກະເວົ້າ, ຈົ່ງຕອບຂ້ານ້ອຍ; ເພາະຂ້າ-
ນ້ອຍປາຖະຫນາທີ່ຈະພິສູດວ່າມ່ານຢູ່ໃນຄວາມຖືກຕ້ອງ. 33ຖ້າບໍ່ດັ່ງນັ້ນ, ຂໍຟັງຂ້ານ້ອຍ; ຂໍໃຫ້ງຽບ, ແລະຂ້ານ້ອຍຈະສອນສະຕິປັນ-
ຍາໃຫ້ແກ່ທ່ານ."

 generated on Tue Jun 17 19:01:42 2025

34 [1]ຍິ່ງກວ່ານັ້ນ, ເອລີຮູເວົ້າຕໍ່ໄປວ່າ:[2]“ຂໍຟັງຖ້ອຍຄຳທັງຫລາຍຂອງຂ້ານ້ອຍ, ເຈົ້າຜູ້ມີປັນຍາ; ຂໍຟັງຖ້ອຍຄຳຂອງຂ້າພະເຈົ້າ, ເຈົ້າຜູ້ມີຄວາມຮູ້.
[3]ເພາະຫູກໍຊີມຖ້ອຍຄຳຕ່າງໆ ເຫມືອນກັບລີ້ນຊີມຣົດຊາດອາຫານ.

[4]ຂໍໃຫ້ເຮົາເລືອກສິ່ງທີ່ຖືກສຳລັບຕົວເຮົາເອງ: ຂໍໃຫ້ພວກຄົ້ນຫາສິ່ງທີ່ດີໃນທ່າມກາງພວກເຮົາ.[5]ເພາະໂຢບກ່າວວ່າ, ‘ຂ້າພະເຈົ້າເປັນຄົນຊອບ-
ທັມ, ແຕ່ພຣະເຈົ້າໄດ້ເອົາຄວາມຊອບທັມຂອງຂ້ານ້ອຍໄປເສຍ.[6]ພຣະອົງບໍ່ໄດ້ສົນພຣະທັຍຄວາມຖືກຕ້ອງຂອງຂ້ານ້ອຍ, ຂ້ານ້ອຍຖືກນັບເປັນຄົນ
ຂີ້ຕົວະ. ບາດແຜຂອງຂ້າພະເຈົ້າ ບໍ່ສາມາດຮັກສາບໍ່ເຊົາໄດ້, ເຖິງແມ່ນວ່າຂ້ານ້ອຍບໍ່ໄດ້ມີບາບ.'
[7]ຄົນແບບໃດຫນໍທີ່ຈະເຫມືອນໂຢບ, ຜູ້ທີ່ດື່ມຄວາມຫມິ່ນປະຫມາດເຫມືອນດື່ມນ້ຳ.[8]ຜູ້ທີ່ເຂົ້າສັງຄົມກັບຄົນເຮັດຄວາມຊົ່ວຊ້າ, ແລະຜູ້ທີ່ຍ່າງໄປ
ກັບຄົນຊົ່ວຫລື?[9]ເພາະລາວໄດ້ກ່າວວ່າ, ‘ບໍ່ໄດ້ປະໂຫຍດຫຍັງກັບການທີ່ຄົນຫນຶ່ງເພິ່ງພໍໃຈ ໃນການເຮັດສິ່ງທີ່ພຣະເຈົ້າຕ້ອງການ.'
[10]ຂໍຟັງຂ້ານ້ອຍເຖີດ, ເຈົ້າຜູ້ມີຄວາມເຂົ້າໃຈ: ການທີ່ເຈົ້າໄດ້ເຮັດຄວາມຊົ່ວນັ້ນ ກໍເປັນສິ່ງທີ່ຫ່າງໄກຈາກພຣະອົງ; ການທີ່ອົງຜູ້ຊົງມີຣິດທານຸພາບ
ຈະຊົງເຮັດຄວາມບາບນັ້ນກໍເປັນເລື່ອງທີ່ຢູ່ຫ່າງຈາກພຣະອົງ.[11]ເພາະພຣະອົງຊົງຕອບສະຫນອງຕາມການເຮັດຂອງມະນຸດ; ພຣະອົງຊົງເຮັດໃຫ້
ທຸກເຄີຍໄດ້ຮັບ ລາງວັນແຫ່ງວິຖີທາງທັງຫລາຍຂອງລາວເອງ.[12]ແທ້ຈິງແລ້ວ, ພຣະເຈົ້າຈະບໍ່ກະທຳສິ່ງຊົ່ວຮ້າຍໃດໆ, ຫລືອົງຜູ້ຊົງມີຣິດທານຸພາບ
ຈະບໍ່ຊົງບິດເບືອນຄວາມຍຸຕິທັມ.
[13]ໃຜທີ່ແຕ່ງຕັ້ງໃຫ້ພຣະອົງເຫນືອແຜ່ນດິນໂລກນີ້ຫລື? ໃຜທີ່ວາງໂລກທັງຫມົດພາຍໃຕ້ພຣະອົງຫລື?[14]ຖ້າພຣະ-
ອົງຊົງຕັ້ງພຣະປະສົງສຳລັບພຣະອົງເອງເທົ່ານັ້ນ, ແລະຖ້າພຣະອົງໄດ້ຊົງຮວບຮວມພຣະວິນຍານຂອງພຣະອົງກັບລົມຫາຍໃຈຂອງພຣະອົງ ກັບ
ຄືນສູ່ພຣະອົງເອງ,[15]ແລ້ວເນື້ອຫນັງທັງຫມົດກໍຈະພິນາດໄປນຳກັນ; ມວນມະນຸດກໍຈະກັບໄປເປັນຂີ້ຝຸ່ນດິນອີກຄັ້ງ.
[16]ຖ້າທ່ານມີຄວາມເຂົ້າໃຈ, ຂໍຟັງຂໍ້ນີ້; ຟັງສຽງຖ້ອຍຄຳຂອງຂ້າພະເຈົ້າ.[17]ຜູ້ທີ່ກຽດຊັງຄວາມຍຸຕິທັມ ສາມາດປົກຄອງໄດ້ບໍ? ທ່ານ
ຈະຕຳນິພຣະເຈົ້າ, ຜູ້ຊົງທີ່ຊອບທັມ ແລະຊົງຣິດຫລື?
[18]ພຣະເຈົ້າ, ຜູ້ກ່າວແກ່ກະສັດອົງຫນຶ່ງວ່າ, ‘ເຈົ້າຜູ້ຊົ່ວຮ້າຍ’ ແລະກ່າວແກ່ພວກຂຸນນາງວ່າ, ‘ພວກເຈົ້າຜູ້ຊົ່ວຮ້າຍ’?
[19]ພຣະເຈົ້າຜູ້ບໍ່ຊົງສຳແດງຄວາມອະຄະຕິແກ່ພວກຜູ້ນຳ ຫລືບໍ່ໄດ້ຍອມຮັບຄົນຮັ່ງມີຫລາຍກວ່າຄົນຍາກຈົນ, ເພາະພວກເຂົາລ້ວນເປັນສິ່ງພຣະ-
ຫັດຂອງພຣະອົງ.[20]ໃນຊ່ວງຂະນະຫນຶ່ງພວກເຂົາກໍຕາຍ; ໃນຍາມທ່ຽງຄືນຜູ້ຄົນຈະຕົວສັ່ນ ແລະຈະຕາຍໄປ; ແລະຄົນທີ່ມີກຳລັງຈະຖືກເອົາໄປ
ເສຍ, ແຕ່ບໍ່ແມ່ນດ້ວຍມືຂອງມະນຸດ.
[21]ເພາະດວງຕາຂອງພຣະອົງຊົງເຫັນບັນດາທາງຂອງທຸກຄົນ; ພຣະອົງຊົງເຫັນທຸກບາດກ້າວຂອງພວກເຂົາທັງຫມົດ.[22]ບໍ່ມີບ່ອນມືດຄຶ້ມ, ຫລືເງົາ
ມັດຈຸຣາດ ທີ່ຄົນເຮັດຄວາມຊົ່ວຊ້າຈະລີ້ຕົວໄດ້.[23]ເພາະພຣະເຈົ້າຈະບໍ່ເປັນຕ້ອງພິສູດຄົນເພີ່ມຂຶ້ນ; -
ບໍ່ຈຳເປັນທີ່ໃຜຄົນໃດຈະຕ້ອງໄປເຂົ້າເຝົ້າພຣະອົງໃນການພິພາກສາ.
[24]ພຣະອົງຊົງທຳລາຍຄົນທັງຫລາຍທີ່ມີກຳລັງໃຫ້ແຫລກເປັນຕ່ອນໆ ເພາະວິທີທັງຫລາຍຂອງພວກເຂົາ, ບໍ່ຈຳເປັນ
ຕ້ອງໄດ້ຮັບການກວດສອບເພີ່ມຕື່ມ; ພຣະອົງຊົງວາງຄົນອື່ນໄວ້ໃນທີ່ຂອງພວກເຂົາ.[25]ດ້ວຍວິທີການນີ້ ພຣະອົງຊົງເຖິງການກະທຳທັງຫລາຍພວກ-
ເຂົາ; ພຣະອົງຊົງໂຄ່ນຄົນເຫລົ່ານີ້ໃນເວລາກາງຄືນ; ພວກເຂົາກໍຖືກທຳລາຍແລ້ວ.
[26]ຕໍ່ຫນ້າຕໍ່ຕາຄົນອື່ນໆ ພຣະອົງຊົງຂ້າພວກເຂົາ ເພາະການກະທຳຢ່າງຊົ່ວຮ້າຍເຊັ່ນອາຊະຍາກັມ.[27]ເພາະພວກເຂົາຫັນອອກຈາກການຕິດຕາມ
ພຣະອົງ ແລະປະຕິເສດທີ່ຈະຍອມຮັບວິຖີທາງທັງຫລາຍຂອງພຣະອົງແຕ່ຢ່າງໃດເລີຍ.[28]ດ້ວຍວິທີນີ້, ພວກເຂົາໄດ້ເຮັດໃຫ້ການຮ້ອງໃຫ້ຂອງຄົນ
ຍາກຈົນມາເຖິງພຣະອົງ; ພຣະອົງຊົງໄດ້ຍິນຟັງສຽງຮ້ອງຂອງຄົນທີ່ເຈັບປ່ວຍ.
[29]ເມື່ອພຣະອົງຊົງງຽບ, ໃຜສາມາດຕຳຫນິພຣະອົງໄດ້ຫລື? ຖ້າພຣະອົງຊົງເຊື່ອງພຣະພັກຂອງພຣະອົງ, ໃຜສາມາດເຂົ້າໃຈພຣະອົງໄດ້ຫລື?
ພຣະອົງປົກຄອງເຫນືອຊົນຊາດ ແລະສ່ວນບຸກຄົນເຊັ່ນກັນ.[30]ເພື່ອວ່າຄົນທີ່ບໍ່ຖືພຣະເຈົ້າຈະບໍ່ໄດ້ປົກຄອງ, ເພື່ອວ່າ
ຈະບໍ່ມີໃຜທີ່ເຮັດໃຫ້ຜູ້ຄົນຕິດກັບດັກ.
[31]ສົມມຸດວ່າ ມີບາງຄົນເວົ້າກັບພຣະເຈົ້າວ່າ, ‘ແນ່ນອນທີ່ຂ້ານ້ອຍເປັນຄົນຜິດ, ແຕ່ຂ້ານ້ອຍຈະບໍ່ເຮັດບາບອີກອີກຕໍ່ໄປ,[32]ຂໍຊົງໂຜດສອນຂ້ານ້ອຍ
ເຖິງສິ່ງທີ່ຂ້ານ້ອຍເບິ່ງບໍ່ເຫັນ; ຂ້ານ້ອຍໄດ້ເຮັດບາບ, ແຕ່ຂ້ານ້ອບຈະບໍ່ເຮັດບາບອີກຕໍ່ໄປ,[33]ທ່ານຄິດວ່າພຣະເຈົ້າຈະລົງໂທດຄວາມບາບຂອງຄົນບໍ,
ໃນເມື່ອທ່ານຕ້ອງເລືອກ, ບໍ່ແມ່ນ, ຂ້າພະເຈົ້າ. ເຫດສະນັ້ນ ຈົ່ງເວົ້າສິ່ງທີ່ທ່ານຮູ້ເຖີດ.
[34]ຄົນທັງຫລາຍຜູ້ມີຄວາມເຂົ້າໃຈຈະເວົ້າກັບຂ້າພະເຈົ້າ- ອັນທີ່ຈິງ, ຄົນທີ່ມີປັນຍາໄດ້ຍິນຂ້ານ້ອຍເວົ້າວ່າ,[35]ໂຢບເວົ້າໂດຍປາສະຈາກຄວາມຮູ້;
ຖ້ອຍຄຳຂອງເຂົາ ປາສະຈາກສະຕິປັນຍາ
[36]ຖ້າພຽງໂຢບຖືກການທົດລອງດ້ວຍລາຍລະອຽດເລັກນ້ອຍທີ່ສຸດ ໃນເລື່ອງຂອງເຂົາ ເພາະການເວົ້າຂອງເຂົາທີ່ ເຫມືອນກັບຄົນຊົ່ວຮ້າຍ.[37]ເພາະ
ເຂົາເພີ່ມການກະບົດເຂົ້າໃນຄວາມບາບຂອງເຂົາ; ເຂົາຕົບມືຂອງເຂົາເຍາະເຍີ້ຍຢູ່ທ່າມກາງພວກເຮົາ; ແລະເຂົາສະສົມຖ້ອຍຄຳທັງຫລາຍຂອງ
ເຂົາ ເພື່ອຕໍ່ສູ້ກັບພຣະເຈົ້າ.”


generated on Tue Jun 17 19:01:42 2025

35 [1]ຈາກນັ້ນເອລີຮູເວົ້າຕໍ່ໄປວ່າ, ເວົ້າວ່າ[2]“ເມື່ອທ່ານເວົ້າວ່າ " ຄວາມຊອບທັມຂອງຂ້ານ້ອຍຕໍ່ພຣະພັກພຣະເຈົ້າ’ ທ່ານຄິດວ່າສິ່ງນີ້ຍຸຕິທັມຫລື?
[3]ເພາະທ່ານຖາມວ່າ, 'ມັນຈະເປັນປະໂຫຍດຫຍັງສຳລັບຂ້ານ້ອຍບໍ?’ ແລະ, ’ຂ້ານ້ອຍດີກວ່ານີ້ບໍ ຖ້າຫາກຂ້ານ້ອຍເຮັດບາບ?’

[4]ຂ້ານ້ອຍຈະຕອບທ່ານ, ທັງທ່ານ ແລະມິດສະຫາຍທັງຫລາຍຂອງທ່ານດ້ວຍ.[5]ຈົ່ງເບິ່ງຂຶ້ນໄປທ້ອງຟ້າ ແລະເບິ່ງເມກ, ຈົ່ງເບິ່ງທ້ອງຟ້າທີ່ສູງກວ່າ
ທ່ານ.
[6]ຖ້າທ່ານເຮັດບາບ, ທ່ານຈະໄດ້ຫຍັງທີ່ກະທົບກະເທືອນພຣະອົງ? ຖ້າຫາກການລະເມີດຂອງທ່ານທະວີຂຶ້ນ, ທ່ານເຮັດສິ່ງໃດແກ່ພຣະອົງຫລື?[7]ຖ້າ
ຫາກທ່ານເປັນຄົນຊອບທັມ, ທ່ານຖວາຍຫຍັງແກ່ພຣະອົງໄດ້ຫລື? ພຣະອົງຈະຊົງໄດ້ຮັບສິ່ງໃດຈາກມືຂອງທ່ານໄດ້ຢູ່ຫລື?[8]ຄວາມຊົ່ວຂອງທ່ານ
ອາດເປັນອັນຕະຣາຍແກ່ມະນຸດຄົນຫນຶ່ງ, ເພາະທ່ານເປັນມະນຸດຄົນຫນຶ່ງ, ແລະຄວາມຊອບທັມຂອງທ່ານກໍເປັນປະໂຫຍດແກ່ລູກຊາຍຂອງມະ-
ນຸດ.
[9]ເພາະການກະທຳແຫ່ງການຖືກບີບບັງຄັບຢ່າງຫລວງຫລາຍ, ຜູ້ຄົນຈຶ່ງຮ້ອງໄຫ້;
ພວກເຂົາຮຽກຂໍຄວາມຊ່ວຍເຫລືອຈາກແຂນທັງຫລາຍຂອງມະນຸດທີ່ມີຣິດອຳນາດ.[10]ແຕ່ບໍ່ມີຈັກຄົນເວົ້າວ່າ, ‘ພຣະເຈົ້າຜູ້ໄດ້ສ້າງຂ້າພະເຈົ້າ, ຜູ້
ປຣະທານບົດເພງໃນຍາມຄ່ຳຄືນ.[11]ຜູ້ຊົງສອນເຮົາຫລາຍກວ່າຊົງສອນເຫລົ່າສັດຮ້າຍເທິງແຜ່ນດິນໂລກນີ້, ແລະຜູ້ສ້າງເຮົາໃຫ້ສະຫລາດ
ກວ່າບັນດານົກໃນທ້ອງຟ້າ?’
[12]ທີ່ນັ້ນ, ພວກເຂົາຮ້ອງທຸກ, ແຕ່ພຣະເຈົ້າບໍ່ປຣະທານຄຳຕອບ ເພາະຄວາມຈອງຫອງຂອງມະນຸດທີ່ຊົ່ວຮ້າຍ.[13]ພຣະເຈົ້າບໍ່-
ຊົງໄດ້ຍິນສຽງຮ້ອງໄຫ້ຂອງຄົນໂງ່ຈ້າ; ອົງຜູ້ຊົງມີຣິດທານຸພາບ ຈະບໍ່ຊົງສົນພຣະທັຍເລີຍ.[14]ພຣະອົງຈະຊົງຕອບທ່ານຫນ້ອຍຊ່ຳໃດ
ຖ້າທ່ານທ່ານບໍ່ເຫັນພຣະອົງ, ຊຶ່ງເລື່ອງລາວຂອງທ່ານຢູ່ຕໍ່ພຣະພັກພຣະອົງ, ແລະຊຶ່ງທ່ານກຳລັງຄອຍຖ້າພຣະອົງ!
[15]ພຣະອົງຊົງຕອບທ່ານນ້ອຍຊ່ຳໃດ ຖ້າຫານທ່ານເວົ້າວ່າ ພຣະອົງບໍ່ເຄີຍລົງໂທດຄົນໃດດ້ວຍພຣະພິໂຣດ, ແລະທີ່ພຣະອົງບໍ່ໄດ້ຊົງສົນພຣະທັຍ
ຕໍ່ຄວາມຍິ່ງຂອງຜູ້ຄົນມັກຫລາຍ.[16]ດັ່ງນັ້ນ ໂຢບຈຶ່ງອ້າປາກຂອງເຂົາເວົ້າ ພຽງເພື່ອເວົ້າຢ່າງຄົນໂງ່ເທົ່ານັ້ນ; ເຂົາເພີ່ມພູນຖ້ອຍຄຳທັງຫລາຍໂດຍ
ປາສະຈາກຄວາມຮູ້.”

## 36

1ເອລີຮູຍັງຄົງກ່າວຕໍ່ໄປ ແລະເວົ້າວ່າ, 2"ອະນຸຍາດໃຫ້ຂ້ານ້ອຍເວົ້າຄົນແດ່ຫນ້ອຍຫນຶ່ງ ແລະຂ້ານ້ອຍຈະສະແດງໃຫ້ທ່ານເຫັນບາງສິ່ງ ເພາະ
ຂ້ານ້ອຍມີສິ່ງທີ່ຈະເວົ້າອີກຈັກຫນ່ອຍເພື່ອປົກປ້ອງພຣະເຈົ້າ. 3ຂ້ານ້ອຍຈະໄດ້ຮັບເອົາຄວາມຮູ້ຂອງຂ້ານ້ອຍມາຈາກບ່ອນໄກ; ແລະ
ຂ້ານ້ອຍຍອມຮັບວ່າຄວາມຊອບທັມນັ້ນ ເປັນຂອງພຣະຜູ້ໄດ້ສ້າງຂ້ານ້ອຍ.

4ເພາະອັນທີ່ຈິງ, ຖ້ອຍຄຳທັງຫລາຍຂອງຂ້າພະເຈົ້າຈະບໍ່ຜິດໄປ; ບາງຄົນທີ່ເປັນຜູ້ໃຫ່ຍໃນດ້ານຄວາມຮູ້ຢູ່ກັບທ່ານ. 5ເບິ່ງແມ, ພຣະເຈົ້າຊົງມີຣິດ-
ທານຸພາບ, ແລະບໍ່ຊົງຫມິ່ນປະຫມາດຜູ້ໃດເລີຍ; ພຣະອົງມີຣິດທານຸພາບໃນເລື່ອງພະລັງແຫ່ງຄວາມເຂົ້າໃຈ.
6ພຣະອົງບໍ່ໄດ້ຊົງລ້ຽງຊີວິດຂອງຄົນຊົ່ວ ແຕ່ຊົງໄດ້ເຮັດສິ່ງທີ່ຖືກຕ້ອງສຳລັບຄົນເຫລົ່ານັ້ນທີ່ທຸກຍາກແທນ. 7ພຣະອົງບໍ່ຊົງໄດ້ຫັນພຣະເນດຂອງ
ພຣະອົງຈາກຄົນຊອບທັມ ແຕ່ຊົງຕັ້ງພວກເຂົາເທິງບັນລັງເຫມືອນບັນດາກະສັດທັງຫລາຍໄວ້ເປັນນິດ, ແລະພວກເຂົາໄດ້ຮັບການຍົກຂຶ້ນບ່ອນສູງ.
8ຖ້າພວກເຂົາຖືກລ່າມດ້ວຍໂສ້ ແລະຕິດກັບດັກແຫ່ງຄວາມທຸກທໍຣະມານ, 9ແລ້ວພຣະອົງຊົງເປີດເຜີຍຕໍ່ພວກເຂົາເຖິງສິ່ງທີ່ພວກເຂົາໄດ້ກະທຳ,
ແລະການລະເມີດຂອງພວກເຂົາກັບຄວາມຍິ່ງຂອງພວກເຂົາ.
10ພຣະອົງຊົງເປີດຫູຂອງພວກເຂົາຕໍ່ຄຳສອນຂອງພຣະອົງດ້ວຍເຊັ່ນກັນ, ແລະຊົງບັນຊາພວກເຂົາໃຫ້ຫັນກັບຈາກຄວາມຊົ່ວຮ້າຍ. 11ຖ້າພວກເຂົາ
ເຊື່ອຟັງພຣະອົງ ແລະນະມັດສະການພຣະອົງ. ພວກເຂົາຈະໃຊ້ວັນທັງຫລາຍຂອງພວກເຂົາໃນຄວາມຈະເຣີນຮຸ່ງເຮືອງ,
ປີທັງຫລາຍຂອງພວກເຂົາດ້ວຍຄວາມສຸກໃຈ. 12ເຖິງຢ່າງໃດ, ຖ້າພວກເຂົາບໍ່ເຊື່ອຟັງ; ພວກເຂົາກໍຈະຈິບຫາຍດ້ວຍດາບ; ແລະພວກເຂົາຈະຕາຍ
ເພາະພວກເຂົາຂາດຄວາມຮູ້.
13ຄົນເຫລົ່ານັ້ນ ທີ່ບໍ່ນັບຖືພຣະເຈົ້າໃນຈິດໃຈ ກໍສະສົມຄວາມໂກດຂອງພວກເຂົາ;
ພວກເຂົາບໍ່ຮ້ອງຂໍຄວາມຊ່ວຍເຫລືອແມ້ເມື່ອພຣະເຈົ້າຊົງມັດພວກເຂົາ. 14ພວກເຂົາຕາຍເມື່ອຍັງວັຍຫນຸ່ມຢູ່; ແລະຊີວິດຂອງພວກເຂົາຢູ່ທ່າມກາງ
ໂສເພນີໃນວິຫານທັງຫລາຍ.
15ພຣະເຈົ້າຊົງຊ່ວຍກູ້ຄົນທີ່ເດືອດຮ້ອນໂດຍຜ່ານຄວາມລຳບາກຂອງພວກເຂົາ; ພຣະອົງຊົງເປີດຫູຂອງພວກເຂົາ
ໂດຍຜ່ານການກົດຂີ່ຂອງພວກເຂົາ. 16ແທ້ຈິງ, ພຣະອົງຊົງດຶງທ່ານອອກຈາກຄວາມເຈັບປວດ
ເພື່ອເຂົ້າໄປໃນສະຖານທີ່ກວ້າງທີ່ບໍ່ມີຄວາມທຸກລຳບາກ ແລະທີ່ໂຕະຂອງທ່ານຈະເຕັມໄປດ້ວຍອາຫານທີ່ເຕັມໄປດ້ວຍໄຂມັນ.
17ແຕ່ທ່ານກໍກັບໄປດ້ວຍການພິພາກສາທີ່ຄວນແກ່ຄົນຊົ່ວຮ້າຍ ແລະຄວາມຍຸດຕິທຳໄດ້ຈັບທ່ານເອົາໄວ້.
18ຢ່າປ່ອຍໃຫ້ຄວາມໂກດຂອງທ່ານຊັກນຳທ່ານສູ່ການເຍາະເຍີ້ຍ, ຫລືຄວາມຫຍິ່ງໃຫຍ່ແຫ່ງຄ່າໄຖ່ຊ່ວຍທ່ານໃຫ້ພົ້ນໄດ້.
19ຄວາມຮັ່ງມີຂອງທ່ານສາມາດໃຫ້ຜົນປະໂຫຍດແກ່ທ່ານ, ເພື່ອວ່າທ່ານຈະບໍ່ຕົກຢູ່ໃນຄວາມລຳບາກ,
ຫລືກຳລັງທັງຫມົດຂອງທ່ານສາມາດຊ່ວຍທ່ານໄດ້ຫລື? 20ຢ່າປາຖະຫນາ ເວລາກາງຄືນ, ເພື່ອເຮັດບາບຕໍ່ຄົນອື່ນ,
ເມື່ອຜູ້ຄົນຖືກຕັດອອກຈາກສະຖານທີ່ຂອງພວກເຂົາ. 21ຈົ່ງລະວັງທີ່ທ່ານຈະບໍ່ຫັນໄປຫາຄວາມບາບ ເພາະ
ທ່ານກຳລັງຖືກທົດສອບໂດຍຄວາມທຸກທໍຣະມານ ເພື່ອທ່ານຈະຄົງຫ່າງໄກຈາກຄວາມບາບ.
22ເບິ່ງແມ, ພຣະເຈົ້າຊົງໄດ້ຮັບການຍົກຍ້ອງໃນຣິດທານຸພາບຂອງພຣະອົງ; ຜູ້ໃດທີ່ເປັນຜູ້ສັ່ງສອນໄດ້ເຫມືອນກັບພຣະອົງບໍ? 23ຜູ້-
ໃດທີ່ເຄີຍສັ່ງສອນພຣະອົງກ່ຽວກັບວິທີທາງຂອງພຣະອົງຫລື? ຜູ້ໃດສາມາດເວົ້າກັບພຣະອົງວ່າ ‘ພຣະອົງໄດ້ກະທຳສິ່ງທີ່ບໍ່ຊອບທັມແລ້ວ?’ 24ຈົ່ງ
ລະນຶກເຖິງການຍົກຍ້ອງພຣະຣາຊະກິດທັງຫລາຍຂອງພຣະອົງ, ຕາມທີ່ປະຊາຊົນໄດ້ຮ້ອງສັນຣະເສີນ.
25ປະຊາຊົນທັງປວງ ໄດ້ເບິ່ງເຫນືອພຣະຣາຊະກິດເຫລົ່ານັ້ນ, ແຕ່ພວກເຂົາເຫັນພຣະຣາຊະກິດເຫລົ່ານັ້ນຈາກທີ່ໄກເທົ່ານັ້ນ. 26ເບິ່ງແມ, ພຣະ-
ເຈົ້າຊົງຫຍິ່ງໃຫຍ່, ແຕ່ເຮົາບໍ່ເຂົ້າໃຈພຣະອົງດີ; ຈຳນວນປີທັງຫລາຍຂອງພຣະອົງກໍບໍ່ສາມາດນັບໄດ້.
27ເພາະພຣະອົງຊົງດຶງເມັດນ້ຳທັງຫລາຍທີ່ພຣະອົງຊົງກັ່ນໃຫ້ເປັນນ້ຳຝົນຈາກອາຍນ້ຳຂອງພຣະອົງ. 28ທີ່ກ້ອນເມກທັງຫລາຍຖອກເທລົງມາ ແລະ
ຍ້ອຍລົງຢ່າງອຸດົມສົມບູນເຫນືອມວນມະນຸດ. 29ອັນທີ່ຈິງ, ໃຜສາມາດເຂົ້າໃຈການແຜ່ອອກຢ່າງກວ້າງຂວາງຂອງກ້ອນເມກທັງຫລາຍ
ແລະສຽງຟ້າຮ້ອງຈາກກະທ່ອມຂອງພຣະອົງໄດ້ຫລື?
30ເບິ່ງເຖີດ, ພຣະອົງຊົງແຜ່ຟ້າແລບຂອງພຣະອົງລ້ອມຮອບພຣະອົງ ແລະຊົງປົກຄຸມຮາກທັງຫລາຍຂອງທະເລ. 31ດ້ວຍວິທີການນີ້, ພຣະ-
ອົງຊົງຕັດສິນປະຊາຊົນທັງຫລາຍ ແລະປຣະທານອາຫານຢ່າງອຸດົມສົມບູນ.
32ພຣະອົງຊົງເຕີມພຣະຫັດຂອງພຣະອົງດ້ວຍຟ້າແລບດ້ວຍຟ້າແລບ ຈົນວ່າພຣະອົງຊົງບັນຊາມັນໃຫ້ຜ່າລົງຕົງຈຸດທີ່ຫມາຍເອົາໄວ້.
33ສຽງຟ້າຮ້ອງຂອງມັນເຕືອນເຖິງອາຍຸ, ຝູງສັດສາມາດໄດ້ຍິນສຽງມັນກຳລັງມາດ້ວຍ.

 generated on Tue Jun 17 19:01:42 2025

37 1ອັນທີຈິງ, ຈິດໃຈຂອງຂ້ານ້ອຍສັ່ນໄຫວດ້ວຍເລື່ອງນີ້; ມັນຖືກເຄື່ອນອອກຈາກທີ່ຂອງມັນ,2ຂໍຈົ່ງຟັງເຖີດ, ໂອ,
ໄດ້ຍິນສຽງອັນດັງຂອງພຣະອົງ, ສຽງທີ່ອອກຈາກພຣະໂອດ ຂອງພຣະອົງ,3ພຣະອົງໄດ້ປ່ອຍໃຫ້ມັນອອກໄປພາຍໃນທ້ອງຟ້າທັງຫມົດ ແລະ
ພຣະອົງຊົງສົ່ງຟ້າແລບຂອງພຣະອົງໄປເຖິງສຸດປາຍແຜ່ນດິນໂລກ.

4ສຽງຫນຶ່ງຄຳລາມຫລັງຈາກມັນ; ພຣະອົງຊົງເຮັດໃຫ້ຟ້າຮ້ອງດ້ວຍພຣະສຸຣະສຽງແຫ່ງພຣະບາຣະມີຂອງພຣະອົງ;
ພຣະອົງບໍ່ຊົງຢັບຢັ້ງຟ້າແມບທີ່ແລ່ນຢ່າງໄວວາ ເມື່ອພຣະສຸຣະສຽງຂອງພຣະອົງເປັນທີ່ໄດ້ຍິນ.5ພຣະເຈົ້າຊົງເຮັດໃຫ້ຟ້າຮ້ອງຢ່າງຫນ້າຢຳເກງ
ດ້ວຍພຣະສຸຣະສຽງຂອງພຣະອົງ; ພຣະອົງຊົງເຮັດໃຫ້ສິ່ງຕ່າງໆທີ່ຍັງຫຍິ່ງໃຫ່ຍທີ່ເຮົາບໍ່ສາມາດເຂົ້າໃຈໄດ້.6ເພາະພຣະອົງກ່າວຕໍ່ຫິມະວ່າ,
‘ຈົ່ງຕົກລົງເທິງແຜ່ນດິນໂລກ’; ເຊັ່ນດຽວກັນກັບສາຍຝົນທີ່ເທລົງມາວ່າ, ‘ ຈົ່ງກາຍເປັນຝົນຫ່າໃຫ່ຍທີ່ເທລົງມາ.‘
7ພຣະອົງຊົງຢຸດມືຂອງມະນຸດທຸກຄົນຈາກການເຮັດວຽກ ເພື່ອວ່າມະນຸດທັງຫລາຍທີ່ພຣະອົງໄດ້ຊົງສ້າງຈະເຫັນພຣະຣາຊະກິດຕ່າງໆຂອງພຣະ-
ອົງ.8ແລ້ວສັດຮ້າຍທັງຫລາຍກໍເຂົ້າໄປເຊື່ອງຕົວ ແລະພັກຢູ່ໃນຖ້ຳຂອງມັນ.9ລົມບ້າຫມູອອກມາຈາກທາງທິດໃຕ້ ແລະຄວາມຫນາວມາຈາກລົມ
ທາງທິດເຫນືອ.
10ໂດຍລົມຫາຍໃຈຂອງພຣະເຈົ້າ; ຄວາມຫນາວກໍຖືກປຣະທານມານ້ຳທັງຫລາຍເກາະຕົວແຂງເຫມືອນກັບໂລຫະ.11ອັນທີ່ແທ້ຈິງ,
ພຣະອົງຊົງເຮັດໃຫ້ເມກຫນາທຶບຫນັກໄປດ້ວຍຄວາມຊຸ່ມຊື່ນ; ພຣະອົງກະຈາຍເມກແຫ່ງຟ້າແລບຂອງພຣະອົງຜ່ານກ້ອນເມກທັງຫລາຍ.
12ພຣະອົງຊົງຫມຸນກ້ອນເມກທັງຫາຍ ໂດຍການນຳຂອງພຣະອົງ, ເພື່ອວ່າພວກມັນຈະເຮັດໃນສິ່ງໃດກໍຕາມທີ່ພຣະອົງໄດ້ຊົງບັນຊາພວກມັນ
ເຫນືອຫນ້າຂອງໂລກທັງຫມົດນີ້.13ພຣະອົງຊົງເຮັດໃຫ້ທຸກສິ່ງນີ້ເກີດຂຶ້ນ; ບາງຄັ້ງມັນເກີດຂຶ້ນເພື່ອການກວດແກ້,
ບາງຄັ້ງເພື່ອດິນແດນຂອງພຣະອົງ ແລະບາງຄັ້ງເປັນດັ່ງການກະທຳແຫ່ງພັນທະສັນຍາອັນສັດຊື່.
14ຂໍຟັງສິ່ງນີ້,' ທ່ານໂຢບເອີຍ, ຈົ່ງຢຸດ ແລະຄິດເຖິງພຣະຣາຊະກິດທັງຫລາຍທີ່ຫນ້າຢຳເກງຂອງພຣະເຈົ້າ.
15ທ່ານຮູ້ບໍ່ວ່າພຣະເຈົ້າຊົງຝືນພຣະທັມຂອງພຣະອົງເຫນືອກ້ອນເມກທັງຫລາຍ ແລະເຮັດໃຫ້ຟ້າແລບມີແສງຢູ່ໃນພວກມັນພຽງໃດ?
16ທ່ານເຂົ້າໃຈເຖິງກ້ອນເມກທັງຫລາຍທີ່ລອຍຢູ່, ພຣະຣາຊະກິດອັນອັສະຈັນທັງຫລາຍຂອງພຣະເຈົ້າ, ຜູ້ຊົງສົມບູນແບບໃນຄວາມຮູ້ຫລື?
17ທ່ານເຂົ້າໃຈກ່ຽວກັບການທີ່ເສື້ອຜ້າທັງຫລາຍຂອງທ່ານຮ້ອນ ເມື່ອດິນແດນນັ້ນສະຫງົບ ເພາະລົມນັ້ນມາຈາກທິດໃຕ້ຫລື?
18ທ່ານສາມາດແຜ່ທ້ອງຟ້າໄດ້ເຫມືອນກັບພຣະອົງໄດ້ບໍ- ທ້ອງຟ້າທີ່ແຂງແຮງເຫມືອນກະຈົກທີ່ເຮັດຈາກໂລຫະຫລອມຢ່າງນັ້ນຫລື?19ຂໍຈົ່ງສອນ
ເຮົາເຖິງສິ່ງທີ່ ເຮົາສົມຄວນຈະທູນຕໍ່ພຣະອົງ; ເພາະເຮົາບໍ່ສາມາດເຜີຍຄຳໂຕ້ແຍ້ງທັງຫລາຍຂອງເຮົາໄດ້ ເພາະຄວາມມືດແຫ່ງຈິດໃຈຂອງເຮົາ.
20ພຣະອົງຊົງສົມຄວນໄດ້ຮັບການບອກຫລື? ຂ້າພະເຈົ້າປາຖະຫນາຈະທູນຕໍ່ພຣະອົງ? ມັນເປັນການທີ່ຄົນຫນຶ່ງປາຖະຫນາຖືກກືນກິນ?
21ບັດນີ້, ຜູ້ຄົນບໍ່ສາມາດເຫັນທີ່ດວງອາທິດເມື່ອມັນສ່ອງແສງໃນທ້ອງຟ້າຫລັງຈາກລົມພັດຜ່ານ ແລະໄດ້ເອົາກ້ອນເມກທັງຫລາຍອອກໄປ.22ແສງ
ທອງເປັ່ງອອກມາຈາກທາງທິດ-ເຫນືອພຣະເຈົ້າຊົງພຣະບາຣະມີອັນຫນ້າຢຳເກງ.
23ສຳລັບອົງຜູ້ມີຣິດທານຸພາບ, ເຮົາບໍ່ສາມາດຄົ້ນພົບພຣະອົງ! ພຣະອົງຊົງຫຍິ່ງໃຫ່ຍດ້ວຍຣິດທານຸພາບ; ພຣະອົງບໍ່ຊົງກົດຂີ່ຄວາມຍຸຕິທັມ ແລະ
ຄວາມຊອບທັມອັນອຸດົມສົມບູນ.24ດ້ວຍເຫດນີ້, ຜູ້ຄົນຈຶ່ງຢຳເກງພຣະອົງ. ພຣະອົງບໍ່ຊົງສົນພຣະທັຍຄົນເຫລົ່ານັ້ນ
ທີ່ມີປັນຫາໃນຄວາມຄິດຂອງພວກເຂົາເອງ.”

 generated on Tue Jun 17 19:01:42 2025

38 1ແລ້ວພຣະຢາເວໄດ້ຊົງຮຽກໂຢບໃຫ້ອອກຈາກພະຍຸຮ້າຍ ແລະກ່າວວ່າ, 2" ຜູ້ນີ້ຄືໃຜທີ່ນຳຄວາມມືດມາສູ່ແຜນງານຕ່າງໆ
ໂດຍບັນດາຖ້ອຍຄຳທີ່ປາສະຈາກຄວາມຮູ້ຫລື? 3ບັດນີ້ ຈົ່ງຄາດເອວຂອງເຈົ້າເຫມືອນກັບຊາຍຄົນຫນຶ່ງ ເພາະເຮົາຈະຖາມຄຳຖາມເຈົ້າ;
ແລະເຈົ້າຕ້ອງຕອບເຮົາ.

4ເຈົ້າຢູ່ໃສເມື່ອເຮົາສ້າງໂລກ? ບອກເຮົາ, ຖ້າຫາກເຈົ້າມີຄວາມເຂົ້າໃຈຢ່າງຫລວງຫລາຍ. 5ຜູ້ໃດກຳນົດຂອບເຂດທັງຫລາຍໃຫ້ກັບມັນຫລື?
ບອກເຮົາ, ຖ້າຫາກຮູ້. ໃຜຄືຜູ້ທີ່ວາງເສັ້ນຂອບແດນເຫນືອມັນຫລື?
6ຮາກຖານຂອງມັນວາງຢູ່ເທິງສິ່ງໃດຫລື? ໃຜວາງສີລາມຸມເອກໃຫ້ກັບມັນຫລື? 7ເມື່ອໃດທີ່ດາວປະຈຳຮຸ່ງເຊົ້າໄດ້ຮ້ອງເພງດ້ວຍກັນ
ແລະບັນດາຊາຍທັງຫລາຍຂອງພຣະເຈົ້າຮ້ອງດ້ວຍຄວາມຍິນດີຫລື?
8ໃຜອັດປະຕູຕັນນ້ຳທະເລທັງຫລາຍ ເມື່ອມັນລະເບີດອອກມາເຫມືອນກັບມັນໄດ້ອອກມາຈາກທ້ອງນັ້ນ- 9ເຮົາ
ໄດ້ສ້າງກ້ອນເມກທັງຫລາຍໃຫ້ເປັນເສື້ອຜ້າຂອງມັນ, ແລະຄວາມມືດທຶບເປັນຜ້າຫໍ່ຕົວຂອງມັນເມື່ອໃດຫລື?
10ນັ້ນຄືເມື່ອເຮົາໄດ້ກຳນົດເຄື່ອງຫມາຍໄວ້ເປັນເຂດກັ້ນສຳລັບທະເລ, ແລະເມື່ອເຮົາໄດ້ວາງຊີ່ ແລະປະຕູທັງຫລາຍຂອງນັ້ນ, 11ແລະເມື່ອເຮົາໄດ້
ບອກຕໍ່ມັນວ່າ, 'ເຈົ້າມາໄກເທົ່ານີ້, ແຕ່ບໍ່ໄກໄປກວ່ານີ້; ນີ້ຄືບ່ອນທີ່ເຮົາກັ້ນເຂດໄວ້ໃຫ້ກັບ ຄວາມຍິ່ງແຫ່ງກະແສຄື້ນທັງຫລາຍຂອງເຈົ້າ.'
12ຕັ້ງແຕ່ວັນທັງຫລາຍຂອງເຈົ້າເລີ່ມຕົ້ນ, ເຈົ້າເຄີຍອອກຄຳສັ່ງໃຫ້ຍາມເຊົ້າເລີ່ມຕົ້ນ
ແລະເຮັດໃຫ້ຍາມຮຸ່ງເຊົ້າຮູ້ສະຖານທີ່ຂອງມັນໃນແຜນການຂອງສິ່ງຕ່າງໆ, 13ເພື່ອວ່າມັນຈະຈັບດ້ານຕ່າງໆຂອງແຜ່ນດິນໂລກນີ້
ຊຶ່ງຄົນຊົ່ວຮ້າຍຈະຖືກສັ່ນສະເທືອນເພາະມັນຫລື?
14ແຜ່ນດິນໂລກຖືກເຮັດໃຫ້ປ່ຽນແປງໃນສະພາບເຫມືອນດິນຫນຽວ ທີ່ປ່ຽນແປງໄປພາຍໃຕ້ຕຣາປຣະທັບອັນຫນຶ່ງ; ທຸກສິ່ງເທິງ
ນັ້ນຢືນແຈ້ງເຫມືອນກັບຜ້າຜືນຫນຶ່ງ 15'ແສງສະຫວ່າງ ' ຂອງຄົນຊົ່ວຮ້າຍນັ້ນຖືກຫນີໄປຈາກພວກເຂົາ; ແຂນທີ່ຍົກຂອງພວກເຂົາກໍຫັກ.
16ເຈົ້າເຄີຍໄປຍັງແຫລ່ງນ້ຳຂອງແປວທະເລບໍ? ເຈົ້າເຄີຍຍ່າງເທິງສ່ວນທີ່ຕ່ຳທີ່ສຸດຂອງທີ່ເລິກໄດ້ຫລື?
17ປະຕູແຫ່ງຄວາມຕາຍໄດ້ຖືກສຳແດງແກ່ເຈົ້າບໍ? ເຈົ້າເຄີຍເຫັນປະຕູແຫ່ງເງົາຄວາມຕາຍບໍ?
18ເຈົ້າເຂົ້າໃຈແຜ່ນດິນໂລກໃນເລື່ອງການຂະຫຍາຍຂອງມັນບໍ? ບອກເຮົາ, ຖ້າເຈົ້າຮູ້ທັງຫມົດກ່ຽວກັບມັນ.
19ທີ່ໃດຄືເສັ້ນທາງໄປສູ່ສະຖານທີ່ພັກແຫ່ງຄວາມສະຫວ່າງ - ເຊັ່ນດຽວກັນສຳລັບຄວາມມືດ, ສະຖານທີ່ຂອງມັນຢູ່ໃສບໍ? 20ເຈົ້າສາມາດນຳຄວາມ
ແສງສະຫວ່າງ ແລະຄວາມມືດມາຍັງທີ່ແຫ່ງການເຮັດວຽກຂອງພວກມັນໄດ້ບໍ?
ເຈົ້າສາມາດຄົ້ນຫາທາງກັບໄປສູ່ບ້ານທັງຫລາຍຂອງພວກມັນໄດ້ບໍ? 21ບໍ່ຕ້ອງສົງໄສເລີຍວ່າ ເຈົ້າຮູ້, ເພາະວ່າເຈົ້າໄດ້ເກີດມາແລ້ວ;
ຈຳນວນວັນທັງຫລາຍຂອງເຈົ້ານັ້ນໃຫ່ຍຫລາຍ!
22ເຈົ້າເຄີຍເຂົ້າໄປໃນຄັງສຳລັບເກັບຫິມະ, ຫລືເຈົ້າເຄີຍເຫັນຄັງເກັບຫມາກເຫັບບໍ, 23ສິ່ງຕ່າງໆເຫລົ່ານີ້ທີ່ເຮົາໄດ້ເກັບໄວ້ສຳລັບເວລາລຳບາກ,
ສຳລັບວັນທັງຫລາຍໃນສົງຄາມ ແລະການເຮັດເສິກສົງຄາມ? 24ແມ່ນຫຍັງຄືເສັ້ນທາງບ່ອນທີ່ຟ້າແລບຖືກປ່ອຍ ຫລືໄປຍັງສະຖານບ່ອນທີ່
ລົມທັງຫລາຍກະຈາຍອອກໄປຈາກທິດຕາເວັນອອກເຫນືອແຜ່ນດິນໂລກນີ້?
25ໃຜທີ່ໄດ້ສ້າງປ່ອງສຳລັບນ້ຳຝົນຫລວງຫລາຍ, ຫລືໃຜທີ່ໄດ້ສ້າງເສັ້ນທາງໃຫ້ກັບຟ້າຮ້ອງດັ່ງສະຫນັ່ນ,
26ເພື່ອເຮັດໃຫ້ມັນເປັນຝົນລົດລົງມາເທິງແຜ່ນດິນທັງຫລາຍທີ່ບໍ່ມີຄົນອາໄສຢູ່, ແລະເຫນືອຖິ່ນທຸຣະກັນດານທີ່ບໍ່ມີໃຜຢູ່,
27ເພື່ອຊ່ວຍເຫລືອບໍຣິເວນຕ່າງໆທີ່ເປັນຫມັນ ແລະໂດດດ່ຽວ ແລະ ເພື່ອເຮັດໃຫ້ຫຍ້າທີ່ນຸ້ມງອກງາມຂຶ້ນມາ?
28ຝົນນັ້ນມີພໍ່ຫລືບໍ? ໃຜທີ່ເຮັດນ້ຳຫມອກເກີດຂຶ້ນ? 29ນ້ຳແຂງນັ້ນອອກມາຈາກທ້ອງແມ່ຂອງຜູ້ໃດບໍ? ໃຜ
ເຮັດໃຫ້ນ້ຳກ້ອນແຂງສີຂາວອອກມາຈາກທ້ອງຟ້າ? 30ນ້ຳທັງຫລາຍໄດ້ເຊື່ອງຕົວ ແລະກາຍເປັນເຫມືອນຫີນ; ຜິວຂອງທີ່ເລິກກາຍເປັນນ້ຳກ້ອນ.
31ເຈົ້າສາມາດມັດດາວລູກໄກ່, ຫລືຄ້າຍເຊືອກຜູກດາວໄຖໄດ້ບໍ?
32ເຈົ້າສາມາດນຳໃຫ້ກຸ່ມດາວຕ່າງໆປະກົດຂຶ້ນໃນເວລາທີ່ເຫມາະສົມຂອງພວກມັນຫລື? ເຈົ້າສາມາດນຳທາງໃຫ້ຫມີກັບລູກໆ ຂອງມັນໄດ້ບໍ?
33ເຈົ້າຮູ້ເຖິງກົດຫມາຍຕ່າງໆຂອງທ້ອງຟ້າຢ່າງນັ້ນບໍ? ເຈົ້າສາມາດຕັ້ງກົດຫມາຍຂອງທ້ອງຟ້າເຫນືອແຜ່ນດິນໂລກໄດ້ບໍ?
34ເຈົ້າສາມາດຍົກສຽງຂອງເຈົ້າຂຶ້ນຕໍ່ກ້ອນເມກທັງຫລາຍເພື່ອວ່ານ້ຳຝົນອັນອຸດົມສົມບູນຈະເຫລົ່ງປົກຄຸມເຈົ້າຢ່າງນັ້ນຫລື? 35ເຈົ້າສາມາດສັ່ງສາຍ
ຟ້າຜ່າລົງມາ ທີ່ພວກມັນອອກໄປ, ທີ່ພວກມັນເວົ້າຫລືວ່າ, 'ພວກເຮົາຢູ່ທີ່ນີ້'?
36ໃຜໄດ້ໃສ່ສະຕິປັນຍາໄວ້ໃນກ້ອນເມກທັງຫລາຍ ຫລືໄດ້ໃຫ້ຄວາມເຂົ້າໃຈແກ່ຫມອກທັງຫລາຍຫລື?
37ໃຜສາມາດນັບຈຳນວນກ້ອນເມກດ້ວຍທັກສະຂອງເຂົາໄດ້ຫລື? 38ເມື່ອໃດທີ່ຝຸ່ນແລ່ນເຂົ້າເກາະກັນຈົນເປັນກ້ອນ
ແລະດິນທັງຫລາຍຂອງແຜ່ນດິນໂລກລວມຕົວກັນຈົນຫນາແຫນ້ນ?
39ເຈົ້າສາມາດລ່າເຫຍື່ອໃຫ້ແກ່ນາງສິງ ຫລືເຮັດໃຫ້ລູກວັຍ ຫນຸ່ມຂອງມັນອີ່ມໄດ້ບໍ? 40ເມື່ອໃດທີ່ພວກມັນຫມູບຢູ່ໃນຖ້ຳຂອງພວກມັນ
ແລະເຊື່ອງຕົວຄອຍຖ້າຢູ່ໃນທີ່ກຳບັງ?
41ໃຜຈັດຫາເຫຍື່ອໃຫ້ແກ່ກັບອີກາ ເມື່ອລູກນ້ອຍຂອງພວກມັນຮ້ອງຕໍ່ພຣະເຈົ້າ ແລະຍ່າງໂຊເຊເພາະຂາດອາຫານ?

 generated on Tue Jun 17 19:01:42 2025

39 1ເຈົ້າຮູ້ບໍ່ວ່າ ເວລາໃດທີ່ແບ້ປ່າເກີດຕາມຊອ່ງຜາຕ່າງໆ ເກີດລູກນ້ອຍຂອງມັນ? ເຈົ້າສາມາດເຝົ້າເບິ່ງກວາງນັ້ນກໍາລັງເກີດລູກຂອງພວກມັນ
ບໍ?2ເຈົ້າສາມາດນັບເດືອນຕ່າງໆທີ່ພວກມັນຢູ່ໃນທ້ອງແມ່ຈັກເດືອນ? ເຈົ້າຮູ້ເວລາເມື່ອພວກມັນເກີດລູກນ້ອຍຂອງພວກມັນບໍ?

3ພວກມັນຫມູບລົງ ແລະໃຫ້ກໍາເນີດລູກນ້ອຍຂອງພວກມັນ, ແລະຈາກນັ້ນຄວາມເຈັບປວດຂອງພວກມັນກໍຫາຍໄປ?4ລູກນ້ອຍທັງຫລາຍ
ຂອງພວກມັນໄດ້ເຕີບໂຕແຂງແຮງໃນທົ່ງໂລ່ງ; ພວກມັນອອກໄປ ແລະບໍ່ກັບມາອີກ.
5ໃຜປ່ອຍໃຫ້ລໍປ່າໄປຢ່າງອິສະຫລະ? ໃຜໄດ້ແກ້ມັດເຊືອກໃຫ້ກັບລວາທີ່ຄ່ອງແຄ້ວນັ້ນ,6ບ້ານຂອງໃຜທີ່ເຮົາໄດ້ສ້າງໄວ້ໃນອາຣາບາ,
ຄືບ້ານຂອງເຂົາໃນແຜ່ນດິນເກືອນັ້ນຫລື?
7ມັນຫົວເຍາະເຍີ້ຍສຽງລົບກວນທັງຫລາຍໃນເມືອງນັ້ນ, ມັນບໍ່ໄດ້ຍິນສຽງຕະໂກນຂອງຄົນຂັບໄລ່.8ມັນພະເນຈອນໄປຕາມພູເຂົາຕ່າງໆ
ເຫມືອນກັບເປັນປ່າຫຍ້າບ່ອນມັນຫາກິນ; ບ່ອນມັນຊອກຫາຫຍ້າອັນຂຽວສົດ ເພື່ອຈະກິນ.
9ງົວກະທິງຈະມີຄວາມສຸກທີ່ໄດ້ເຮັດວຽກໃຫ້ເຈົ້າບໍ? ມັນພໍໃຈທີ່ຈະຢູ່ໃນຄອກງົວຂອງເຈົ້າບໍ?10ເຈົ້າສາມາດຄວບຄຸມງົວປ່າໃຫ້ໄຖນາໄດ້
ດ້ວຍໄມ້ເທົ້າອັນຫນຶ່ງບໍ? ຫລືມັນຈະໄຖຄາດລໍາຫ້ວຍຕ່າງໆໃຫ້ກັບເຈົ້າບໍ?
11ເຈົ້າໄວ້ໃຈມັນເພາະມັນມີກໍາລັງເຂັ້ມແຂງຢ່າງນັ້ນບໍ? ເຈົ້າຈະປ່ອຍການງານຂອງເຈົ້າໄວ້ໃຫ້ມັນເຮັດຢ່າງນັ້ນບໍ?12ເຈົ້າຈະເພິ່ງອາ-
ໄສມັນນໍາຮວງເຂົ້າກັບໄປຍັງບ້ານຂອງເຈົ້າ, ໃຫ້ມັນຮວບຮວມຮວງເຂົ້າທີ່ລານຟາດເຂົ້າຂອງເຈົ້າຢ່າງນັ້ນບໍ?
13ປີກທັງຫລາຍຂອງນົກກະຈອກເທດກໍພືອອກຢ່າງອວດໂຕ, ແຕ່ພວກມັນ ແມ່ນປີກແລະຂົນທີ່ໃຫ້ຄວາມຮັກບໍ?
14ເພາະມັນອອກໄຂ່ທັງຫລາຍຂອງມັນເທິງແຜ່ນດິນໂລກ, ແລະມັນປະໄຂ່ເຫລົ່ານັ້ນອົບອຸ່ນຢູ່ໃນຝຸ່ນ;15ມັນລືມວ່າ ຕີນສັດອື່ນອາດຈະມາ
ຢຽບໄຂ່ເຫລົ່ານັ້ນ ຫລືສັດປ່າອາດຈະຢຽບຢໍ່າພວກມັນໄດ້.
16ມັນເຮັດການຢ່າງຮຸນແຮງກັບລູກນ້ອຍທັງຫລາຍຂອງມັນ ເຫມືອນກັບວ່າໄຂ່ນັ້ນບໍ່ແມ່ນຂອງມັນ; ມັນບໍ່ຢ້ານວ່າແຮງຂອງມັນອາດເສຍໄປລ້າໆ.
17ເພາະພຣະເຈົ້າໄດ້ຊົງຖອນສະຕິປັນຍາຈາກມັນ ແລະບໍ່ປຣະທານຄວາມເຂົ້າໃຈໃດໆ ໃຫ້ກັບມັນ.18ເມື່ອມັນແລ່ນຫນີໄປໄວ,
ມັນຫົວເຍາະເຍີ້ຍມ້າ ແລະຜູ້ທີ່ຂີ່ມ້ານັ້ນ.
19ເຈົ້າໄດ້ມອບກໍາລັງໃຫ້ກັບມ້າບໍ? ເຈົ້າສວມຄໍຂອງມັນດ້ວຍແຜງຍາວຫຸ້ມຄໍຂອງມັນບໍ?20ເຈົ້າເຮັດໃຫ້ມັນກະໂດດເຕັ້ນໄດ້ເຫມືອນຕັກແຕນບໍ?
ຄວາມຍິ່ງໃຫ່ຍຂອງສຽງທີ່ອອກມາຈາກດັງຂອງມັນກໍຫນ້າກົວ.
21ມັນເກືອກກົ້ວດິນດ້ວຍກໍາລັງ ແລະຊື່ນຊົມຍິນດີໃນກໍາລັງຂອງມັນ; ມັນຟ້າວອອກໄປເພື່ອເຂົ້າຫາອາວຸດ22ມັນເຍາະເຍີ້ຍຄວາມກົວ ແລະບໍ່
ຫວັ່ນໄຫວ; ມັນບໍ່ຫັນກັບຈາກດາບ.23ງູຫາງກະດິງສັ່ນປາຍຫາງ, ເພື່ອຕໍ່ສູ້ດ້ານຂ້າງຂອງມັນ ພ້ອມກັບຫອກແຫລມກັບທວນ.
24ມັນກືນພື້ນດິນດ້ວຍຄວາມດຸຮ້າຍ ແລະຄວາມໂກດແຄ້ນ; ໃນສຽງແກ, ມັນບໍ່ສາມາດຢືນຢູ່ບ່ອນດຽວ.25ເມື່ອໃດກໍຕາມທີ່ສຽງເປົ່າແກດັງຂຶ້ນ,
ມັນຮູ້ຈັກວ່າ, 'ຍິນດີ!' ມັນໄດ້ກິ່ນສົງຄາມຈາກທີ່ໄກ- ສຽງໂຫ່ຮ້ອງດັງສະຫນັ່ນຂອງຜູ້ບັນຊາການທັງຫລາຍ ແລະສຽງຂອງມວນຊົນ.
26ມັນແມ່ນສະຕິປັນຍາຂອງເຈົ້າບໍ ເຮັດໃຫ້ແຫລວບິນໄດ້ທີ່ມັນກາງປີກບິນໄປທາງທິດໃຕ້?
27ມັນແມ່ນຄໍາສັ່ງຂອງເຈົ້າບໍ ທີ່ເຮັດໃຫ້ນົກອິນຊີຂຶ້ນໄປບ່ອນສູງ ແລະເຮັດຮັງຂອງມັນທີ່ສູງ?28ມັນອາໄສຢູ່ເທິງຫນ້າຜາ ແລະເຮັດຮັງຂອງມັນເທິງ
ໂງ່ນຫີນສູງຂອງຫນ້າຜາ, ເປັນປ້ອມທີ່ເຂັ້ມແຂງຫນຶ່ງ.
29ຈາກທີ່ນັ້ນມັນຫລຽວຫາເຫຍື່ອ; ສາຍຕາຂອງມັນເຫັນເຫຍື່ອເຫລົ່ານັ້ນຈາກທີ່ໄກ.30ລູກນ້ອຍຂອງມັນດື່ມເລືອດເຊັ່ນກັນ;
ມີຜູ້ທີ່ຖືກຂ້າຢູ່ບ່ອນໃດມັນກໍຈະຢູ່ບ່ອນນັ້ນ."


generated on Tue Jun 17 19:01:42 2025

40 [1]ພຣະຢາເວກ່າວຕໍ່ໂຢບຕໍ່ໄປ; ພຣະອົງໄດ້ກ່າວວ່າ,
[2]ສິ່ມຄວນຫລືທີ່ຜູ້ປາຖະຫນາການຕັດສິນຈະພະຍາຍາມແກ້ໄຂອົງຜູ້ຊົງຣິດທານຸພາບໃຫ້ຖືກຕ້ອງ? ເຂົາຜູ້ທີ່ໂຕ້ຖຽງກັບພຣະເຈົ້າ,
ຂໍໃຫ້ເຂົາຕອບເຖີດ."

[3]ແລ້ວໂຢບໄດ້ທູນຕອບພຣະຢາເວ ແລະເວົ້າວ່າ:[4]ເບິ່ງແມ, ຂ້ານ້ອຍເປັນຄົນທີ່ບໍ່ສຳຄັນອັນໃດ; ຂ້ານ້ອຍຈະສາມາດທູນຕອບພຣະອົງຢ່າງໃດໄດ້? -
ຂ້ານ້ອຍວາງມືຂອງຂ້ານ້ອຍເຫນືອປາກຂອງຂ້ານ້ອຍ.[5]ຂ້ານ້ອຍໄດ້ເວົ້າແລ້ວ, ແລະຂ້ານ້ອຍຈະບໍ່ຕອບ; ແທ້ຈິງ, ສອງຄັ້ງ,
ແຕ່ຂ້ານ້ອຍຈະບໍ່ເຮັດອີກຕໍ່ໄປ."
[6]ແລ້ວພຣະຢາເວໄດ້ຕອບໂຢບອອກມາຈາກລົມພະຍຸແຮງ ແລະກ່າວວ່າ,[7]ບັດນີ້ ຈົ່ງມັດແອວຂອງເຈົ້າເຫມືອນກັບຊາຍຄົນຫນຶ່ງ
ເພາະເຮົາຈະຖາມຄຳຖາມເຈົ້າ ແລະເຈົ້າຕ້ອງຕອບເຮົາ.
[8]ເຈົ້າຈະເວົ້າຈິງໆ ຫລືວ່າເຮົາບໍ່ຍຸຕິທັມ? ເຈົ້າຈະຕຳນິເຮົາເພື່ອເຈົ້າຈະຮຽກຮ້ອງວ່າເຈົ້າຖືກຕ້ອງຢ່າງນັ້ນຫລື?[9]ເຈົ້າມີ
ແຂນຫນຶ່ງເຫມືອນກັບແຂນຂອງພຣະເຈົ້າຫລື? ເຈົ້າສາມາດເຮັດໃຫ້ຟ້າຮ້ອງດ້ວຍສຽງເຫມືອນກັບພຣະອົງຫລື?
[10]ບັດນີ້, ຈົ່ງສວມຕົວເອງດ້ວຍຄວາມສະຫງ່າຣາສີ ແລະຄວາມມີກຽຕ; ຈົ່ງແຕ່ງກາຍຂອງເຈົ້າດ້ວຍກຽຕ ແລະບາຣະມີ.
[11]ຈົ່ງກະຈາຍຄວາມໂກດຮ້າຍອັນເກີນຄວນຂອງເຈົ້າ; ເບິ່ງທີ່ທຸກຄົນທີ່ ຍິ່ງ ແລະເຮັດໃຫ້ເຂົາຖ່ອມຕົວລົງ.
[12]ຈົ່ງເບິ່ງທີ່ທຸກຄົນທີ່ຍິ່ງ ແລະເຮັດໃຫ້ເຂົາຖ່ອມຕົວລົງ; ກຳຈັດຄົນຊົ່ວຮ້າຍເມື່ອພວກເຂົາຢືນຂຶ້ນ.[13]ຝັງພວກເຂົາໃນແຜ່ນດິນນີ້ດ້ວຍກັນ;
ກັກຂັງໃບຫນ້າຂອງພວກເຂົາໃນສະຖານທີ່ເຊື່ອງຕົວ.[14]ແລ້ວເຮົາຍອມຮັບກ່ຽວກັບເຈົ້າວ່າ
ມືຂວາຂອງເຈົ້າຈະສາມາດຊ່ວຍຕົວເຈົ້າເອງໃຫ້ລອດພົ້ນໄດ້.
[15]ບັດນີ້ ຈົ່ງເບິ່ງສັດທີ່ໂຕໃຫ່ຍທີ່ສຸດ, ທີ່ເຮົາໄດ້ສ້າງມັນເຫມືອນກັບສ້າງເຈົ້າ; ມັນກິນຫຍ້າເຫມືອນງົວ.[16]ບັດນີ້ ເບິ່ງເຖີດ,
ກຳລັງຂອງມັນຢູ່ໃນເອວຂອງມັນ; ອຳນາດຂອງມັນຢູ່ໃນກ້າມທ້ອງຂອງມັນ.
[17]ເສັ້ນເອັນທັງຫລາຍທີ່ກົກຂາຂອງມັນກໍປະສານເຂົ້າດ້ວຍກັນ.[18]ກະດູກທັງຫລາຍຂອງມັນເປັນເຫມືອນທອງສຳລິດ; ແຂ່ງຂາທັງຫລາຍຂອງມັນ
ເຫມືອນກັບທ່ອນເຫລັກ.
[19]ມັນເປັນຫົວຫນ້າຂອງສິ່ງທີ່ຊົງສ້າງທັງຫລາຍຂອງພຣະເຈົ້າ, ມີພຽງພຣະເຈົ້າເທົ່ານັ້ນ, ຜູ້ທີ່ໄດ້ສ້າງມັນຂຶ້ນມາ, ທີ່ສາມາດປາບມັນໃຫ້ພ່າຍແພ້.
[20]ເພາະເນີນເຂົາທັງຫລາຍຈັດຕຽມອາຫານໃຫ້ກັບມັນ. ສັດຮ້າຍທັງຫລາຍແຫ່ງທົ່ງຫຍ້າຫລິ້ນຢູ່ໃກ້ໆ.[21]ມັນນອນລົງຢູ່ລຸ່ມກົກບົວໃນຮົ່ມຂອງກົກ
ອໍ້ຢູ່ໃນຫນອງບຶງ.
[22]ກົກບົວປົກຄຸມມັນດ້ວຍຮົ່ມເງົາ; ກົກຊະໂນໃກ້ນ້ຳ ກໍຢູ່ລ້ອມຮອບມັນ.[23]ເບິ່ງແມ, ຖ້າຫາກແມ່ນ້ຳສາຍຫນຶ່ງຖ້ວມລົ້ນຕະລິ່ງ, ມັນກໍບໍ່ຫວັ່ນໄຫວ;
ມັນຫມັ້ນໃຈ, ເຖິງແມ້ແມ່ນ້ຳຈໍແດນຈະຍັງໄຫລພຸ່ງຜ່ານຢູ່ທີ່ປາກຂອງພວກມັນ.[24]ໃຜສາມາດຈັບມັນໄດ້ດ້ວຍຂອງເກາະ,
ຫລືແທງດັງຂອງມັນຜ່ານທາງກັບດັກໄດ້ຫລື?


generated on Tue Jun 17 19:01:42 2025

41 [1]ເຈົ້າສາມາດເອົາລາກເລວີອາທານອອກໄດ້ດ້ວຍເບັດໃສ່ປາບໍ? ຫລືມັດຜູກລີ້ນຂອງມັນດ້ວຍເຊືອກໄດ້ບໍ?[2]ເຈົ້າສາມາດເອົາກົ້
ເຊືອກເຂົ້າໄປໃນຮູດັງຂອງມັນ, ຫລື ເຈາະລີ້ນຂອງມັນໃຫ້ທະລຸດ້ວຍຂໍເກາະໄດ້ບໍ?[3]ມັນຈະຂໍອ້ອນວອນເຈົ້າໃຫ້ປ່ອຍຫລືບໍ? ມັນ
ຈະເວົ້າຖ້ອຍຄຳອ່ອນຫວານກັບເຈົ້າຫລືບໍ?

[4]ມັນຈະເຮັດພັນທະສັນຍາກັບເຈົ້າ, ເພື່ອເຈົ້າຈະເອົາມັນໄປເປັນທາດຕະຫລອດໄປຢ່າງນັ້ນບໍ?[5]ເຈົ້າຈະຫລິ້ນກັບມັນເຫມືອນຫລິ້ນກັບນົກໄດ້ຫລື?
ເຈົ້າຈະມັດມັນດ້ວຍເຊືອກສຳລັບທາດຍິງທັງຫລາຍຂອງເຈົ້າໄດ້ບໍ?[6]ກຸ່ມຊາວປະມົງທັງຫລາຍຈະຕໍ່ລອງກັບມັນໄດ້ບໍ?
ພວກເຂົາຈະແບ່ງມັນເພື່ອແລກປ່ຽນໃນທ່າມກາງພໍ່ຄ້າໄດ້ບໍ?
[7]ເຈົ້າສາມາດແທງຫນັງຂອງມັນດ້ວຍຫລາວ ຫລື ແທງຫົວມັນດ້ວຍຫອກຈັບປາຢ່າງນັ້ນບໍ?[8]ວາງມືຂອງເຈົ້າເທິງມັນພຽງແຕ່ຄັ້ງຫນຶ່ງ
ແລະເຈົ້າຈະລະນຶກເຖິງສົງຄາມ ແລະບໍ່ເຮັດມັນອີກ.[9]ເບິ່ງແມ, ຄວາມຫວັງຂອງຄົນໃດທີ່ເຮັດສິ່ງນັ້ນ ຍ່ອມເປັນການຂີ້ຕົວະ;
ຈະບໍ່ມີຄົນໃດຖືກໂຍນລົງໄປເທິງພື້ນດ້ວຍການຢາກເຫັນຂອງມັນດອກຫລື?
[10]ບໍ່ມີໃຜທີ່ດຸຮ້າຍ ພໍທີ່ຈະປຸກເລວີອາທານໃຫ້ລຸກຂຶ້ນ; ແລ້ວໃຜຄືມັນຫລືສາມາດຢືນຕໍ່ຫນ້າເຮົາໄດ້?[11]ໃຜໄດ້ມອບສິ່ງໃດກໍຕາມທີ່ຢູ່ກັບເຮົາກ່ອນ
ເພື່ອເຮົາຈະສົມຄວນຕອບແທນມັນຫລື? ສິ່ງໃດກໍຕາມທີ່ຢູ່ພາຍໃຕ້ທ້ອງຟ້າລ້ວນເປັນຂອງເຮົາ.[12]ເຮົາຈະບໍ່ມິດງຽບ
ເນື່ອງຈາກຂາທັງຫລາຍຂອງເລວີອາທານ, ຫລືບໍ່ມິດງຽບກ່ຽວກັບກຳລັງຂອງມັນ. ຫລືບໍ່ມິດງຽບກ່ຽວກັບຮູບຮ່າງອັນສະຫງ່າງາມຂອງມັນ.
[13]ໃຜສາມາດລອກຫນັງຄຸມດ້ານນອກຂອງມັນອອກໄດ້ຫລື?  ໃຜສາມາດແທງທະລຸເສື້ອເກາະສອງຊັ້ນຂອງມັນໄດ້ລື?[14]ໃຜ
ທີ່ສາມາດເປີດປະຕູທັງຫລາຍແຫ່ງຫນ້າຂອງມັນ- ປາກຂອງມັນກໍເຕັມດ້ວຍແຂ້ວອັນຫນ້າຢ້ານຫລາຍ.[15]ຫລັງຂອງມັນຖືກສ້າງໃຫ້ເປັນແນວທາງ
ແຜ່ນເຫລັກທັງຫລາຍ; ຕິດກັນ ແຫນັ້ນເຫມືອນກັບຕິດແຈບເຂົ້າໄວ້
[16]ອັນຫນຶ່ງຕິດກັບອີກອັນ ຊຶ່ງອາກາດບໍ່ສາມາດທະລຸພວກມັນໄດ້.[17]ພວກມັນຍຶດຕິດກັນ; ພວກມັນເກາະຕິດກັນແຫນັ້ນ
ເພື່ອວ່າພວກມັນຈະບໍ່ສາມາດຖືກດຶງໃຫ້ຂາດຈາກກັນ.[18]ເມື່ອປະກາຍໄຟແລບອອກມາຈາກສຽງຫາຍໃຈຂອງມັນ;
ດວງຕາຂອງມັນເປັນເຫມືອນກັບຫນັງຕາຂອງແສງອາລຸນ.
[19]ແປວໄຟຮ້ອນຮົນອອກມາຈາກປາກຂອງມັນ ແລະປະກາຍໄຟປິວອອກມາ.[20]ມີຄວັນອອກມາຈາກຮູດັງຂອງມັນ ເຫມືອນ
ກັບຫມໍ້ຕົ້ມນ້ຳທີ່ກຳລັງຟົດຕັ້ງຢູ່ເທິງໄຟທີ່ຖືກພັດໃຫ້ຮ້ອນຢ່າງຫລາຍ.[21]ລົມຫາຍໃຈຂອງມັນຈຸດຖ່ານໃຫ້ຮ້ອນຈົນເປັນໄຟ; ແປວໄຟອອກມາຈາກ
ປາກຂອງມັນ.
[22]ໃນຄໍຂອງມັນຄືກຳລັງ, ແລະຄວາມສະຫຍົດສະຫຍອງເຕັ້ນຕໍ່ ຫນ້າມັນ.[23]ຮອຍທ່ຽວຂອງຫນັງຂອງມັນເກາະຕິດກັນ;
ພວກມັນເກາະແຫນັ້ນຢູ່ເທິງຕົວຂອງມັນ.ພວກມັນບໍ່ສາມາດຖືກເຮັດໃຫ້ເຄື່ອນໄປໃສໄດ້.[24]ຫົວໃຈຂອງມັນແຂງເຫມືອນຫີນ-ອັນທີ່ຈິງ, ແຂງ
ເຫມືອນກັບຫີນໂມ້ແປ້ງທີ່ຈົມລົງ.
[25]ເມື່ອມັນຍົກຕົວຂອງມັນເອງຂຶ້ນ, ແມ້ແຕ່ພຣະເຈົ້າທັງຫລາຍກໍຕ້ອງຕົກໃຈຢ້ານ ເພາະຄວາມກົວ, ພວກເຂົາຈຶ່ງຖອຍຫລັງ.[26]ຖ້າເອົາດາບ
ເຫລັ້ມຫນຶ່ງຕໍ່ສູ້ມັນ, ດາບນັ້ນເຮັດຫຍັງມັນບໍ່ໄດ້ - ແລະແມ້ແຕ່ຫອກອັນຫນຶ່ງ, ລູກທະນູ, ຫລືອາວຸດໃດໆກໍຕາມ.[27]ມັນຄິດເຖິງເຫລັກວ່າເປັນ
ເຟືອງເຂົ້າ,  ແລະທອງສຳລິດເປັນເຫມືອນໄມ້ຜຸພັງ.
[28]ລູກທະນູດອກຫນຶ່ງບໍ່ສາມາດເຮັດໃຫ້ມັນຫນີໄປໄດ້; ສຳລັບມັນແລ້ວຫີນສະລິງກໍກາຍເປັນແກບ.[29]ໄມ້ຄ້ອນເຫັນເຫມືອນກັບຕໍເຟືອງ; ມັນຫົວ-
ຂວັນໃຫ້ກັບການຕໍ່ສູ້ດ້ວຍຊັດຫອກໃສ່.[30]ສ່ວນດ້ານລຸ່ມຂອງມັນເປັນເຫມືອນຫມໍ້ແຕກທີ່ແຫລມຄົມ;
ທັນຖົມທາງທີ່ແຜ່ອອກລົງໃນຂີ້ຕົມເຫມືອນກັບວ່າມັນເປັນເລື່ອນນວດເຂົ້າ.
[31]ມັນເຮັດໃຫ້ຟອງຈາກທີ່ເລິກລອຍຂຶ້ນມາເຫມືອນກັບຫມໍ້ຕົ້ມນ້ຳຟົດ; ມັນເຮັດໃຫ້ນ້ຳທະເລເຫມືອນກັບຫມໍ້ຂີ້ເຜີ້ງ.
[32]ມັນປຸກໃຫ້ຕື່ນດ້ວຍແສງດ້ານຫລັງມັນ; ຄົນຈະຄິດວ່າທີ່ເລິກມີຜົມສີເທົາ.
[33]ເທິງແຜ່ນດິນໂລກ ບໍ່ມີໃຜທຽບມັນໄດ້, ຄືຜູ້ທີ່ໃຊ້ຊີວິດໂດຍປາສະຈາກຄວາມຢ້ານກົວ.[34]ມັນເຫັນທຸກສິ່ງທີ່ອວດຈອງຫອງ;
ມັນເປັນຣາຊາເຫມືອນລູກຊາຍທັງຫລາຍຂອງຄວາມຍິ່ງ."

42 1ແລ້ວໂຢບຈຶ່ງໄດ້ທູນພຣະຢາເວ ແລະກ່າວວ່າ,2"ຂ້ານ້ອຍຮູ້ວ່າ ພຣະອົງສາມາດເຮັດທຸກສິ່ງ;
ບໍ່ມີພຣະປະສົງໃດຂອງພຣະອົງທີ່ສາມາດຖືກຢຸດຢັ້ງໄດ້.3'ໃຜເປັນຜູ້ນີ້ທີ່ຊ່ອນແຜນການທັງຫລາຍໂດຍປາສະຈາກຄວາມຮູ້?' ແທ້ຈິງແລ້ວ, ຂ້າ-
ນ້ອຍໄດ້ກ່າວສິ່ງຕ່າງໆ ທີ່ຂ້ານ້ອຍບໍ່ເຂົ້າໃຈ, ທີ່ຍາກເກີນກວ່າທີ່ຂ້ານ້ອຍຈະເຂົ້າໃຈໄດ້ສິ່ງຕ່າງໆ,
ຊຶ່ງຂ້ານ້ອຍບໍ່ມີຄວາມຮູ້ກ່ຽວກັບສິ່ງເຫລົ່ານັ້ນເລີຍ.

4ພຣະອົງຊົງກ່າວແກ່ຂ້ານ້ອຍ, 'ບັດນີ້, ຈົ່ງຟັງ, ແລະເຮົາຈະເວົ້າເຮົາຈະຖາມສິ່ງຕ່າງໆໃຫ້ແກ່ເຈົ້າ ແລະເຈົ້າຈະບອກເຮົາ'5ຂ້ານ້ອຍ
ໄດ້ຍິນກ່ຽວກັບພຣະອົງດ້ວຍການໄດ້ຍິນຈາກຫູຂອງຂ້ານ້ອຍ, ແຕ່ບັດນີ້ດວງຕາຂ້ານ້ອຍໄດ້ເຫັນພຣະອົງ.6ດັ່ງນັ້ນ ຂ້ານ້ອຍຈຶ່ງດູຖູກຕົວເອງ;
ຂ້ານ້ອຍໄດ້ປ່ຽນໃຈໄປນັ່ງຢູ່ໃນຝຸ່ນດິນ ແລະຂີ້ເຖົ່າ.
7ເມື່ອຫລັງຈາກທີ່ພຣະອົງໄດ້ກ່າວຖ້ອຍຄຳເຫລົ່ານີ້ແກ່ໂຢບ, ພຣະຢາເວຊົງກ່າວຕໍ່ເອລີຟັດ ຊາວເທມານວ່າ, "ຄວາມໂກດຂອງເຮົາພຸ່ງຂຶ້ນຕໍ່ເຈົ້າ
ແລະຕໍ່ເພື່ອນທັງສອງຄົນຂອງເຈົ້າ, ເພາະເຈົ້າບໍ່ເວົ້າຄວາມຈິງກ່ຽວກັບເຮົາຢ່າງຖືກຕ້ອງ, ເຫມືອນກັບຜູ້ຮັບໃຊ້ຂອງເຮົາຄືໂຢບໄດ້ກ່າວ.
8ດັ່ງນັ້ນບັດນີ້, ຈົ່ງເອົາງົວເຖິກເຈັດໂຕກັບແກະເຖິກເຈັດໂຕຂອງເຈົ້າ, ໄປຫາຜູ້ຮັບໃຊ້ເຮົາຄືໂຢບ, ແລະຈົ່ງຖວາຍເຄື່ອງເຜົາຖວາຍບູຊາສຳ-
ລັບເພື່ອຕົວຂອງເຈົ້າເອງ. ຜູ້ຮັບໃຊ້ຂອງເຮົາຄືໂຢບຈະອະທິຖານເພື່ອເຈົ້າ, ແລະເຮົາຈະຍອມຮັບຄຳອະທິຖານຂອງເຈົ້າ,
ເພື່ອວ່າເຮົາຈະຈັດການກັບເຈົ້າ ຕາມຄວາມໂງ່ຈ້າຂອງເຈົ້ານັ້ນ. ເຈົ້າບໍ່ໄດ້ເວົ້າສິ່ງທີ່ຖືກຕ້ອງກ່ຽວກັບເຮົາ ເຫມືອນກັບຜູ້ຮັບໃຊ້ຂອງເຮົາ
ຄືໂຢບໄດ້ກ່າວ."9ດັ່ງນັ້ນເອລີຟັດ ຊາວເທມານ, ບິນດັດ ຊາວຊູອາ ແລະໂຊຟາຊາວນາມາອາ ຈຶ່ງໄດ້ໄປ
ແລະໄດ້ເຮັດຕາມທີ່ພຣະຢາເວຊົງບັນຊາພວກເຂົາ, ແລະພຣະຢາເວໄດ້ຊົງມອບຮັບໂຢບ.
10ເມື່ອໂຢບໄດ້ອະທິຖານ ເພື່ອເພື່ອນທັງຫລາຍຂອງລາວ, ພຣະຢາເວໄດ້ຊົງເຮັດໃຫ້ຄວາມອຸດົມສົມບູນຂຶ້ນອີກແກ່ໂຢບ. ພຣະຢາເວ
ຊົງມອບໃຫ້ແກ່ເຂົາຫລາຍເປັນສອງເທົ່າຈາກສິ່ງທີ່ເຂົາມີມາກ່ອນ.11ແລ້ວບັນດາອ້າຍນ້ອງຊາຍທັງຫລາຍ, ອີກທັງເອື້ອຍ ແລະນ້ອງສາວ
ແລະທຸກຄົນທີ່ເຄີຍເປັນຄົນຮູ້ຈັກກັນກັບເຂົາກ່ອນຫນ້ານີ້- ພວກເຂົາ ໄດ້ມາຫາໂຢບທີ່ນັ້ນ ແລະກິນອາຫານຮ່ວມກິນລ້ຽງ
ຮ່ວມກັບເຂົາໃນເຮືອນຂອງເຂົາ. ພວກເຂົາໄດ້ໂສກເສົ້າຮ່ວມກັບໂຢບ ແລະປອບໂຍນເຂົາກັນ ພັຍພິບັດຕ່າງໆ
ທີ່ພຣະຢາເວໄດ້ຊົງນຳມາເຫນືອເຂົາ. ທຸກຄົນແຕ່ລະຄົນ ໄດ້ມອບແຜ່ນເງິນຫນຶ່ງແຜ່ນ ແລະແຫວນຄຳຫນຶ່ງວົງແກ່ໂຢບ.
12ພຣະຢາເວໄດ້ຊົງອວຍພອນໃຫ້ໂຢບ ໃນຊ່ວງບັ້ນປາຍຂອງຊີວິດໃຫ້ມີໃຫ້ມີຫລາຍກວ່າຕອນຕົ້ນ; ໂຢບໄດ້ເປັນເຈົ້າຂອງແກະສິບສີ່ພັນໂຕ, ອູດ
ຫົກພັນໂຕ, ງົວກວຽນພັນຄູ່ ແລະລໍຕົວເມຍພັນໂຕ.13ລາວມີລູກຊາຍເຈັດຄົນ ແລະລູກສາວສາມຄົນ.14ລາວເອີ້ນຊື່ລູກສາວກົກວ່າ ເຢມີມາ, ເອີ້ນ
ຜູ້ຖັດວນສອງວ່າ ເກຊີຢາ ແລະຜູ້ຖັດວນສາມວ່າ ເກເຣັນຮາປຸກ.
15ໃນແຜ່ນດິນທັງຫລາຍ ບໍ່ມີຍິງໃດຄົນໃດທີ່ຖືກພິບວ່າງົດງາມເທົ່າລູກສາວຂອງໂຢບ. ພໍ່ຂອງພວກນາງໄດ້ແບ່ງມໍຣະດົກໃຫ້ພວກນາງເຫມືອນ
ກັບມອບໃຫ້ບັນດາອ້າຍນ້ອງຊາຍຂອງພວກນາງ.16ຫລັງຈາກນີ້ໄປ, ໂຢບໄດ້ມີຊີວິດຢູ່ອີກຮ້ອຍສີ່ສິບປີ; ລາວໄດ້ເຫັນບັນດາລູກຊາຍ
ແລະຫລານຊາຍທັງຫລາຍຈົນສີ່ຊ່ວງອາຍຸຄົນ.17ແລ້ວໂຢບຈຶ່ງສິ້ນຊີວິດ, ຂະນະທີ່ເຖົ້າແກ່ແລ້ວ ແລະມີຊີວິດຈົນເຕັມອາຍຸໄຂ.

# ເພງສັນຣະເສີນ

1 1ຄວາມສຸກເປັນຂອງຄົນທີ່ບໍ່ໄດ້ຍ່າງຕາມຄຳແນະນຳຂອງຄົນຊົ່ວ, ຫລືຢືນໃນທາງຂອງຄົນບາບທັງຫລາຍ, ຫລື ນັ່ງໃນທີ່ຊຸມນຸມຂອງພວກຄົນ
ຫລວງຫລາຍ.2ແຕ່ຄວາມຊົມຊື່ນຍິນດີຂອງເຂົາຢູ່ໃນພຣະຄັມຂອງພຣະຢາເວ, ແລະ ເຂົາພາວັນນາພຣະຄັມຂອງພຣະອົງທັງກາງເວັນ ແລະ
ກາງຄືນ.

3ເຂົາຈະເປັນຄືຕົ້ນໄມ້ທີ່ປູກໄວ້ໃກ້ລຳທານນ້ຳທັງຫລາຍຊຶ່ງເຮັດໃຫ້ເກີດຫມາກຕາມຣະດູການຂອງມັນ, ໃບກໍບໍ່ຫ່ຽວແຫ້ງ; ບໍ່ວ່າເຂົາຈະເຮັດຫຍັງ
ກໍຈະຈະເຣີນຮຸ່ງເຮືອງ.
4ຄົນຊົ່ວຊ້າບໍ່ເປັນເຊັ່ນນັ້ນເລີຍ, ແຕ່ກັບເປັນຄືຂີ້ແກບທີ່ລົມພັດປິວໄປ.5ດັ່ງນັ້ນຄົນຊົ່ວຈະຢືນຢູ່ບໍ່ໄດ້ໃນວັນພິພາກສາ, ແລະບໍ່ມີຄົນບາບທັງຫລາຍ
ໃນທີ່ຊຸມນຸມຂອງຄົນຊອບທັມ.
6ເພາະວ່າພຣະເຈົ້າຢາເວໄດ້ຊົງເຫັນຊອບທາງຂອງຄົນຊອບທັມ, ແຕ່ທາງຂອງຄົນຊົ່ວຈະຈິບຫາຍໄປ.

2 [1]ເປັນຫຍັງບັນດາປະຊາຊາດຈຶ່ງຕົກຢູ່ໃນຄວາມວຸ້ນວາຍ, ແລະເປັນຫຍັງເຫລົ່າປະຊາຊົນຈຶ່ງຄິດແຜນການວາງອຸບາຍອັນໄຮ້ປະໂຫຍດ?[2]ບັນ
ດາກະສັດຂອງແຜ່ນດິນໂລກຈຶ່ງລຸກຂຶ້ນຮ່ວມຫົວກັນ ແລະບັນດາຜູ້ປົກຄອງກໍສຸມຫົວກັນ ກະບົດຕໍ່ພຣະຢາເວ ແລະຕໍ່ພຣະ
ເມຊີອາຂອງພຣະອົງ, ກ່າວວ່າ,[3]"ຂໍໃຫ້ພວກເຮົາຢຽບສາຍໂສ້ທີ່ພວກເຂົາໃສ່ພວກເຮົາ ແລະ ປົດໂສ້ຂອງພວກເຂົາອອກໄປເສຍ."

[4]ພຣະອົງຜູ້ຊົງປະທັບໃນສະຫວັນຈະຊົງຫົວຂວັນພວກເຂົາ; ອົງພຣະຜູ້ເປັນເຈົ້າຈະຊົງຫຍໍ້ຫຍັນພວກເຂົາ.[5]ແລ້ວພຣະອົງຈະເຕືອນພວກເຂົາດ້ວຍ
ຄວາມໂກດຮ້າຍຂອງພຣະອົງ ແລະ ເຮັດໃຫ້ພວກເຂົາຢ້ານກົວດ້ວຍຄວາມໂມໂຫຂອງພຣະອົງ, ກ່າວວ່າ,
[6]"ເຮົາເອງໄດ້ແຕ່ງຕັ້ງກະສັດຂອງເຮົາຢູ່ເທິງພູເຂົາຊີໂອນ, ພູເຂົາອັນສັກສິດຂອງເຮົາ."[7]ຂ້ານ້ອຍຈະປ່າວປະກາດຕາມຄຳຂອງພຣະເຈົ້າຢາເວ. ພ
ຣະອົງກ່າວແກ່ຂ້ານ້ອຍວ່າ, "ເຈົ້າເປັນລູກຊາຍຂອງເຮົາ! ໃນມື້ນີ້ເຮົາເປັນບິດາຂອງເຈົ້າ.
[8]ຈົ່ງຂໍຈາກເຮົາ, ແລະເຮົາຈະມອບບັນດາປະຊາຊົນໃຫ້ເປັນມໍຣະດົກຂອງເຈົ້າ ແລະດິນແດນທີ່ໄກໄປຈົນເຖິງສຸດປາຍແຜ່ນດິນໂລກໃຫ້ເປັນກຳ
ມະສິດຂອງເຈົ້າ.[9]ເຈົ້າຈະຂ້ຽນພວກເຂົາດ້ວຍໄມ້ແສ້ເຫລັກ; ຄືກັນກັບໄຫຂອງຊ່າງປັ້ນ, ເຈົ້າຈະຟາດໃຫ້ແຕກເປັນປ່ຽງໆ."
[10]ດັ່ງນັ້ນ, ບັດນີ້ພວກເຈົ້າຜູ້ເປັນກະສັດທັງຫລາຍ; ຈົ່ງຟັງຄຳເຕືອນ, ພວກເຈົ້າບັນດາຜູ້ປົກຄອງແຫ່ງແຜ່ນດິນໂລກຈົ່ງປັບປຸງຕົວເອງ.[11]ຈົ່ງນະມັສະ
ການພຣະຢາເວດ້ວຍຢຳເກງ ແລະ ຊື່ນຊົມຍິນດີດ້ວຍການຕົວແສ່ງ.
[12]ຈົ່ງຈູບຮັກພຣະບຸດ ຫລື ຈະໃຫ້ພຣະອົງໂກດຮ້າຍເຈົ້າ, ແລະເຈົ້າຈະຕາຍຕາມທາງ ເມື່ອຄວາມໂກດຮ້າຍຂອງພຣະອົງລຸກຂຶ້ນມາໃນທັນທີ. ແຕ່
ບັນດາຄົນທັງປວງທີ່ລີ້ພັຍຢູ່ໃນພຣະອົງກໍເປັນສຸກແທ້.

 generated on Tue Jun 17 19:01:42 2025

3 ເພງສັນຣະເສີນຂອງກະສັດດາວິດ, ເມື່ອລາວໜີຈາກອັບຊາໂລມລູກຊາຍຂອງລາວ.[1]ຂ້າແດ່ພຣະຢາເວ, ສັດຕຣູຂອງຂ້ານ້ອຍຊ່າງຫລວງ
ຫລາຍເຫລືອເກີນ! ຄົນທັງຫລາຍໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ.[2]ຫລາຍຄົນກ່າວເຖິງຂ້ານ້ອຍວ່າ, "ບໍ່ມີຄວາມຊ່ວຍເຫລືອຈາກພຣະເຈົ້າສຳລັບ
ລາວ." ເສລາ

[3]ແຕ່ເຈົ້າ, ພຣະຢາເວ, ຊົງເປັນໂລ້ລ້ອມຮອບຂ້ານ້ອຍ, ຊົງເປັນສັກສີຂອງຂ້ານ້ອຍ, ແລະຊົງເປັນຜູ້ທີ່ຊູຫົວຂອງຂ້ານ້ອຍຂຶ້ນ.[4]ຂ້ານ້ອຍຍົກສຽງ
ຂອງຂ້ານ້ອຍທູນຕໍ່ພຣະຢາເວ, ແລະພຣະອົງຊົງຕອບຂ້ານ້ອຍຈາກເນີນພູເຂົາບໍຣິສຸດຂອງພຣະອົງ. ເສລາ
[5]ຂ້ານ້ອຍຢຽດຕົວລົງແລະຫລັບໄປ, ຂ້ານ້ອຍໄດ້ຕື່ນຂຶ້ນອີກ, ເພາະພຣະຢາເວໄດ້ຊົງປົກປ້ອງຂ້ານ້ອຍ.[6]ຂ້ານ້ອຍຈະບໍ່ຢ້ານຝູງຊົນຫລວງຫລາຍທີ່
ຕັ້ງຕົນຂຶ້ນຕໍ່ສູ້ຂ້ານ້ອຍຮອບດ້ານ.
[7]ຂໍຊົງລຸກຂຶ້ນ, ຂ້າແດ່ພຣະຢາເວ! ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດ, ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ! ເພາະພຣະອົງຈະຊົງຕົບໜ້າຂອງສັດຕຣູທັງ
ປວງຂອງຂ້ານ້ອຍ; ພຣະອົງຈະຊົງຫັກແຂ້ວຂອງຄົນຊົ່ວເສຍ.[8]ຄວາມລອດມາຈາກພຣະຢາເວ. ຂໍພຣະພອນຂອງພຣະອົງຢູ່ເໜືອປະຊາກອນ
ຂອງພຣະອົງດ້ວຍເຖີດ. ເສລາ

 generated on Tue Jun 17 19:01:42 2025

# 4 ສໍາລັບຫົວຫນ້ານັກດົນຕຣີ; ກ່ຽວກັບເຄື່ອງດົນຕຣີ. ບົດເພງສັນຣະເສີນໂດຍດາວິດ.

[1]ຂໍຊົງຕອບຂ້ານ້ອຍເມື່ອຂ້ານ້ອຍຮ້ອງທູນ, ພຣະເຈົ້າແຫ່ງຄວາມຊອບທັມຂອງຂ້ານ້ອຍ; ຂໍຊົງປຣະທານຊ່ອງທາງເມື່ອຂ້ານ້ອຍຫມົດຫົນທາງ. ຂໍ
ຊົງເມດຕາຂ້ານ້ອຍ ແລະຊົງຟັງຄໍາຮ້ອງທູນຂອງຂ້ານ້ອຍ.

[2]ປະຊາກອນທັງຫລາຍເອີຍ, ພວກທ່ານຈະປ່ຽນກຽດຕິຍົດຂອງເຮົາໃຫ້ກາຍເປັນຄວາມອັບອາຍອີກດົນນານເທົ່າໃດ? ພວກທ່ານຈະຮັກສິ່ງທີ່ໄຮ້
ຄ່າແລະສະແຫວງຫາຄໍາຕົວະຍົວະອີກດົນນານເທົ່າໃດ? ເສລາ [3]ແຕ່ຈົ່ງຮູ້ເຖີດວ່າພຣະເຈົ້າຢາເວຊົງເລືອກຄົນຊອບທັມສໍາລັບພຣະອົງເອງ. ພຣະ
ຢາເວຈະຊົງຟັງເມື່ອເຮົາຮ້ອງທູນຕໍ່ພຣະອົງ.
[4]ຈົ່ງຕົວສັ່ນດ້ວຍຄວາມຢ້ານ, ແຕ່ຢ່າເຮັດບາບ! ຈົ່ງຕຶກຕອງໃນໃຈເທິງທີ່ນອນຂອງທ່ານແລະຈົ່ງມິດງຽບຢູ່. ເສລາ [5]ຈົ່ງຖວາຍບັນດາເຄື່ອງບູຊາ
ແຫ່ງຄວາມຊອບທັມ ແລະໄວ້ວາງໃຈໃນພຣະຢາເວ.
[6]ຫລາຍຄົນກ່າວວ່າ, "ໃຜຈະສໍາແດງສິ່ງດີໆ ໃຫ້ເຮົາໄດ້ເຫັນ?" ຂ້າແດ່ພຣະຢາເວ, ຂໍຊົງສ່ອງແສງແຫ່ງພຣະພັກຂອງພຣະອົງມາເຫນືອພວກ
ເຮົາ. [7]ພຣະອົງໄດ້ຊົງປຣະທານໃຫ້ໃຈຂ້ານ້ອຍຍິນດີຫລາຍກ່ວາເມື່ອເວລາທີ່ຄົນອື່ນມີເຂົ້າ ແລະເຫລົ້າອະງຸ່ນໃຫມ່ຢ່າງອຸດົມ. [8]ຂ້ານ້ອຍຈະເອນຕົວ
ລົງແລະນອນຫລັບຢ່າງເປັນສຸກ, ຂ້າແດ່ພຣະຢາເວ, ເພາະພຣະອົງເທົ່ານັ້ນທີ່ຊົງເຮັດໃຫ້ຂ້ານ້ອຍຢູ່ລອດປອດພັຍ.

5 [1]ກັບເຄື່ອງດົນຕຣີທີ່ຫຼັລຫາຍ. ບົດເພງສັນຣະເສີນຂອງດາວິດ. 1 ຂ້າແດ່ພຣະຢາເວ, ຂໍຊົງຟັງຄໍາຮ້ອງທູນຂອງຂ້ານ້ອຍທີ່ມີຕໍ່ພຣະອົງ; ຂໍຊົງພິ
ຈາຣະນາສຽງຄໍາຄວນຂອງຂ້ານ້ອຍ.[2]ຂ້າແດ່ກະສັດແລະພຣະເຈົ້າຂອງຂ້ານ້ອຍ, ຂໍຊົງຟັງສຽງຄໍາຮ້ອງຂອງຂ້ານ້ອຍ, ເພາະຂ້ານ້ອຍທູນ
ວິງວອນຕໍ່ພຣະອົງ.[3]ຂ້າແດ່ພຣະຢາເວ, ພຣະອົງຊົງຟັງສຽງຮ້ອງໄຫ້ຂອງຂ້ານ້ອຍໃນຍາມເຊົ້າ; ຂ້ານ້ອຍຈະທູນວິງວອນຕໍ່ພຣະອົງໃນຍາມເຊົ້າ
ແລະລໍຄອຍດ້ວຍຄວາມຫວັງ.

[4]ແນ່ນອນວ່າພຣະອົງບໍ່ໄດ້ຊົງເປັນພຣະເຈົ້າຜູ້ຊົງພໍໃຈກັບຄວາມຊົ່ວ; ບັນດາຄົນຊົ່ວຈະເຂົ້າເຝົ້າພຣະອົງບໍ່ໄດ້.[5]ຄົນອວດອົ່ງຈອງຫອງຈະບໍ່ໄດ້ຢືນຢູ່
ຕໍ່ຫນ້າຂອງພຣະອົງ; ພຣະອົງຊົງກຽດຊັງຜູ້ທີ່ຊົ່ວຮ້າຍທັງປວງ.[6]ພຣະອົງຈະຊົງທໍາລາຍບັນດາຄົນຂີ້ຕົວະ; ພຣະຢາເວຊົງກຽດຊັງບັນດາຜູ້ກໍ່
ຄວາມຮຸນແຮງແລະຫລອກລວງ.
[7]ແຕ່ສໍາຫລັບຂ້ານ້ອຍ, ເພາະຄວາມຊື່ສັດແຫ່ງຄໍາສັນຍາອັນຍິ່ງໃຫຍ່ຂອງພຣະອົງ, ຂ້ານ້ອຍຈະເຂົ້າໄປໃນພຣະວິຫານຂອງພຣະອົງ; ຂ້ານ້ອຍ
ຈະກົ້ມກາບລົງຕໍ່ພຣະວິຫານອັນບໍຣິສຸດຂອງພຣະອົງດ້ວຍຄວາມຢໍາເກງ.[8]ໂອ້ຂ້າແດ່ອົງພຣະຜູ້ເປັນເຈົ້າ, ເຫດເພາະບັນດາສັດຕຣູຂອງຂ້ານ້ອຍ
ຂໍຊົງນໍາຂ້ານ້ອຍເຂົ້າໄປໃນຄວາມຊອບທັມຂອງພຣະອົງ; ຂໍຊົງເຮັດທາງຂອງພຣະອົງໃຫ້ລາບລື່ນຕໍ່ຫນ້າຂ້ານ້ອຍ.
[9]ເພາະບໍ່ມີຄວາມຈິງໃນປາກຂອງພວກເຂົາເລີຍ; ກາຍພາຍໃນຂອງພວກເຂົານັ້ນຊົ່ວ; ລໍາຄໍຂອງພວກເຂົາເປັນຫລຸມຝັງສົບທີ່ເປີດຢູ່; ພວກເຂົາ
ປະຈົບປະແຈງດ້ວຍລີ້ນຂອງພວກເຂົາ.[10]ຂໍຊົງປະກາດວ່າພວກເຂົາມີຄວາມຜິດ, ຂ້າແດ່ພຣະເຈົ້າ; ຂໍໃຫ້ພວກເຂົາລົ້ມລົງດ້ວຍແຜນຮ້າຍຂອງ
ພວກເຂົາເອງ! ຂໍຊົງຂັບໄລ່ພວກເຂົາອອກໄປເພາະການລະເມີດອັນຫລວງຫລາຍຂອງພວກເຂົາ, ເພາະພວກເຂົາໄດ້ທໍຣະຍົດຕໍ່ພຣະອົງ.
[11]ແຕ່ຂໍໃຫ້ຄົນທັງປວງທີ່ລີ້ພັຍຢູ່ໃນພຣະອົງຍິນດີ; ໃຫ້ພວກເຂົາເປັ່ງສຽງຮ້ອງດ້ວຍຄວາມຍິນດີຢູ່ສະເຫມີ ເພາະພຣະອົງຊົງປ້ອງກັນພວກເຂົາ;
ໃຫ້ບັນດາຄົນທີ່ຮັກພຣະນາມຊື່ຂອງພຣະອົງ, ໄດ້ຊື່ນຊົມຍິນດີໃນພຣະອົງ[12]ເພາະພຣະອົງຈະຊົງອວຍພອນແກ່ຄົນຊອບທັມ, ພຣະເຢາເວ; ພຣະ
ອົງຈະຊົງໂອບລ້ອມພວກເຂົາດ້ວຍຄວາມພໍໃຈດັ່ງໂລ້ກໍາບັງ.

 generated on Tue Jun 17 19:01:42 2025

6 ກ່ຽວກັບເຄື່ອງດົນຕຣີ, ຕັ້ງໃນຮູບແບບ ຊີມິນິດ. ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະຢາເວ, ຂໍຢ່າຊົງໂມໂຫຂ້ານ້ອຍດ້ວຍຄວາມໂກດ
ຮ້າຍຂອງພຣະອົງ ຫລືຕີສອນຂ້ານ້ອຍດ້ວຍພຣະພິໂຣດຂອງພຣະອົງ.[2]ຂໍຊົງກະຣຸນາແກ່ຂ້ານ້ອຍ, ພຣະຢາເວ, ເພາະຂ້ານ້ອຍຫມົດແຮງ; ຂໍ
ຊົງຮັກສາຂ້ານ້ອຍ, ຂ້າແດ່ພຣະຢາເວ, ເພາະກະດູກທັງຫລາຍຂອງຂ້ານ້ອຍກໍສັ່ນຢູ່.

[3]ຈິດໃຈຂອງຂ້ານ້ອຍກໍເປັນທຸກຫນັກ. ແຕ່ພຣະອົງເຈົ້າຂ້າ, ພຣະຢາເວ - ຈະເປັນແບບນີ້ໄປອີກດົນປານໃດ?[4]ຂໍຊົງຫັນກັບມາ, ພຣະຢາເວ! ຂໍຊົງ
ຊ່ວຍກູ້ຂ້ານ້ອຍ. ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ![5]ເພາະໃນຄວາມຕາຍ ບໍ່ມີການລະລຶກເຖິງພຣະອົງ. ແລ້ວໃນແດນມໍຣະນາ ໃຜ
ຈະຂອບພຣະຄຸນພຣະອົງແດ່?
[6]ຂ້ານ້ອຍອ່ອນແຮງດ້ວຍການຮ້ອງໄຫ້. ຂ້ານ້ອຍເຮັດໃຫ້ບ່ອນນອນຂອງຂ້ອຍ ປຽກຊຸ່ມດ້ວຍນ້ຳຕາຕະຫລອດທັງຄືນ; ຂ້ານ້ອຍລ້າງບ່ອນນອນ
ຂອງຂ້ານ້ອຍດ້ວຍນ້ຳຕາຂອງຂ້ານ້ອຍ.[7]ຕາຂອງຂ້ານ້ອຍໃຄ່ຟອງໄປດ້ວຍຄວາມເສົ້າ; ມັນອ່ອນແຮງເພາະບັນດາສັດຕຣູທັງຫມົດຂອງຂ້ານ້ອຍ.
[8]ຈົ່ງໄປໃຫ້ພົ້ນຈາກເຮົາ, ພວກເຈົ້າທັງຫມົດຜູ້ເຮັດຄວາມຊົ່ວ; ເພາະພຣະຢາເວ ຊົງໄດ້ຍິນສຽງຮ້ອງໄຫ້ຂອງເຮົາແລ້ວ.[9]ພຣະຢາເວຊົງໄດ້ຍິນ
ສຽງຮ້ອງຂໍຄວາມກະຣຸນາຂອງເຮົາແລ້ວ; ພຣະຢາເວໄດ້ຊົງຮັບຄຳອະທິຖານຂອງເຮົາ.[10]ບັນດາສັດຕຣູທັງປວງຂອງຂ້ານ້ອຍຈະອັບອາຍ. ແລະ
ປະສົບທຸກຫນັກ ພວກເຂົາຈະຫັນກັບແລະສັບສົນໃນທັນທີ.

 generated on Tue Jun 17 19:01:42 2025

# 7

ສ່ວນປະກອບດົນຕຣີຂອງດາວິດ, ເຊິ່ງລາວຮ້ອງເຖິງພຣະຢາເວເປັນຖ້ອຍຄຳຂອງເບນຢາມິນ.[1]ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ຂ້າ
ນ້ອຍລີ້ພັຍໃນພຣະອົງ! ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດພົ້ນຈາກຄົນທັງຫລາຍທີ່ໄລ່ຕາມຂ້ານ້ອຍ, ແລະຂໍຊົງຊ່ວຍກູ້ຂ້ານ້ອຍ[2]ບໍ່ດັ່ງນັ້ນແລ້ວ, ພວກ
ເຂົາຈະຈີກຂ້ານ້ອຍຢ່າງສິງ, ຈີກຂ້ານ້ອຍອອກເປັນຕ່ອນໆ ຈົນບໍ່ມີໃຜສາມາດພາຂ້ານ້ອຍໄປສູ່ຄວາມປອດພັຍໄດ້.

[3]ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ຂ້ານ້ອຍບໍ່ເຄີຍເຮັດໃນສິ່ງ ທີ່ບັນດາສັດຕຣູຂອງຂ້ານ້ອຍກ່າວຫາ; ວ່າຂ້ານ້ອຍໄດ້ເຮັດ ໃນມືຂອງຂ້າ
ນ້ອຍ ບໍ່ມີຄວາມຍຸຕິທັມເລີຍ.[4]ຂ້ານ້ອຍບໍ່ເຄີຍເຮັດຜິດ ຕໍ່ຄົນທີ່ມາຢ່າງສັນຕິຕໍ່ຂ້ານ້ອຍ, ຫລືທຳຮ້າຍຄົນທີ່ມາຕໍ່ຕ້ານ ຂ້ານ້ອຍໂດຍບໍ່ໄດ້ຄິດ.
[5]ຖ້າຂ້ານ້ອຍບໍ່ບອກຄວາມຈິງ ກໍຂໍໃຫ້ສັດຕຣູຂອງຂ້ານ້ອຍຕາມລ້າຊີວິດຂອງຂ້ານ້ອຍແລະໄລ່ທັນ; ຂໍໃຫ້ເຂົາຢຽບຢໍ່າ ຮ່າງກາຍທີ່ມີຊີວິດຢູ່ຂອງ
ຂ້ານ້ອຍຈົນຕິດດິນ ແລະປ່ອຍໃຫ້ຂ້ານ້ອຍນອນເກືອກຝຸ່ນຢ່າງໄຮ້ກຽຕ. ເສລາ
[6]ຂໍຊົງລຸກຂຶ້ນເຖີດ, ຂ້າແດ່ພຣະຢາເວ, ດ້ວຍຄວາມກິ້ວໂກດຂອງພຣະອົງ; ຂໍຊົງຢືນຂຶ້ນຕໍ່ຕ້ານຄວາມໂກດຂອງພວກສັດຕຣູຂອງຂ້ານ້ອຍ; ຂໍຊົງ
ຕື່ນຂຶ້ນເພື່ອເຫັນແກ່ຂ້ານ້ອຍ ແລະຊົງພິພາກສາຢ່າງທ່ຽງທັມ ຕາມທີ່ພຣະອົງໄດ້ຊົງບັນຊາໄວ້ສຳຫລັບພວກເຂົາ.[7]ບັນດາປະເທດຕ່າງໆ ໄດ້ມາ
ຊຸມນຸມອ້ອມຮອບຂ້ານ້ອຍ; ຂໍຊົງກັບໄປຢູ່ໃນຖານະອັນຊອບທັມ ເຫນືອພວກເຂົາອີກຄັ້ງຫນຶ່ງ.
[8]ຂ້າແດ່ພຣະຢາເວ, ຂໍຊົງພິພາກສາຊົນຊາດຕ່າງໆ; ຂໍຊົງແກ້ຕາງແທນຂ້ານ້ອຍ, ຂ້າແດ່ພຣະຢາເວ, ເພາະຂ້ານ້ອຍຊອບທັມ ແລະບໍ່ມີຄວາມ
ຜິດ, ສູງສຸດ.[9]ຂໍໃຫ້ການກະທຳຊົ່ວຂອງຄົນຊົ່ວຮ້າຍມາເຖິງຈຸດສິ້ນສຸດ, ແຕ່ຂໍຊົງຕັ້ງຄົນຊອບທັມຂຶ້ນ ຂ້າແດ່ພຣະເຈົ້າຜູ້ຊົງຊອບທັມ, ຜູ້ຊົງຢັ່ງຮູ້
ຈິດໃຈແລະຄວາມຄິດທັງຫລາຍ.
[10]ໂລ້ຂອງຂ້ານ້ອຍມາຈາກພຣະເຈົ້າ, ຜູ້ຊົງຊ່ວຍຄົນທີ່ມີໃຈສັດຊື່ພຣະອົງໃຫ້ພົ້ນພັຍ.[11]ພຣະເຈົ້າຊົງເປັນຜູ້ຕັດສິນທີ່ຊອບທັມ, ຊົງເປັນພຣະເຈົ້າຜູ້
ຊົງເຈັບຮ້ອນແທນໃນແຕ່ລະມື້.
[12]ຖ້າຄົນນັ້ນບໍ່ໄດ້ກັບໃຈໃຫມ່, ພຣະເຈົ້າຈະຊົງຝົນດາບຂອງພຣະອົງແລະຈະຊົງຕຽມທະນູຂອງພຣະອົງເພື່ອເຮັດສົງຄາມ.[13]ພຣະອົງ
ຊົງຕຽມອາວຸດຕໍ່ຕ້ານເຂົາ; ເພາະພຣະອົງຈະເຮັດໃຫ້ລູກສອນຂອງພຣະອົງເປັນລູກສອນໄຟ.
[14]ໃຫ້ລອງຄິດເຖິງຄົນທີ່ຖືພາກັບຄວາມຊົ່ວ, ຄົນທີ່ວາງແຜນການແຫ່ງການທຳລາຍ, ຄົນທີ່ດຳເນີນການຫລອກລວງທີ່ອັນຕະລາຍ.[15]ເຂົາຂຸດຂຸມ
ແລະຫ້າງໄວ້ແລ້ວເຂົາກໍຕົກລົງໃນຂຸມທີ່ເຂົາໄດ້ຂຸດໄວ້.[16]ແຜນແຫ່ງຄວາມຈິບຫາຍຂອງຕົວເຂົາເອງໄດ້ກັບມາຕົກເທິງຫົວຂອງເຂົາເອງ, ເພາະ
ຄວາມຮຸນແຮງໄດ້ຕົກເທິງຫົວຂອງເຂົາເອງ.
[17]ຂ້ານ້ອຍຈະຖວາຍຂອບພຣະຄຸນແດ່ພຣະຢາເວ ເພາະຄວາມຍຸຕິທັມຂອງພຣະອົງ; ຂ້ານ້ອຍຈະຮ້ອງສັນຣະເສີນແດ່ພຣະຢາເວຜູ້ສູງສຸດ.



generated on Tue Jun 17 19:01:42 2025

8 ສຳຫລັບນັກດົນຕຣີ; ຕັ້ງຕາມແບບກິດຕິ. ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ, ພຣະນາມຊື່ຂອງພຣະອົງ
ສູງສົ່ງທົ່ວທັງແຜ່ນດິນໂລກ, ພຣະອົງຜູ້ຊົງສຳແດງພຣະສະຫງ່າຣາສີຂອງພຣະອົງເໜືອບັນດາຟ້າສະຫວັນເບື້ອງເທິງ.[2]ເປັນເພາະເຫລົ່າສັດ
ຕຣູຂອງຂ້າ ພຣະອົງໄດ້ຊົງສ້າງຄຳສັນຣະເສີນໃຫ້ອອກຈາກປາກຂອງບັນດາເດັກອ່ອນແລະເດັກແຮກເກີດທັງຫລາຍ, ເພື່ອຈະໄດ້ປິດປາກທັງສັດ
ຕຣູແລະຜູ້ເຮັດການແກ້ແຄ້ນນັ້ນເສຍ.

[3]ເມື່ອຂ້ານ້ອຍແນມເບິ່ງບັນດາຟ້າສະຫວັນຂອງພຣະອົງຊຶ່ງເປັນສີມືຂອງພຣະອົງ, ດວງຈັນແລະດວງດາວທັງຫລາຍ, ຊຶ່ງພຣະອົງໄດ້ຊົງຕັ້ງໄວ້,
[4]ເຊື້ອສາຍຂອງມະນຸດສຳຄັນຫຍັງແດ່ທີ່ພຣະອົງຕ້ອງຄຶດເຖິງພວກເຂົາ, ຫລືມະນຸດເປັນຜູ້ໃດທີ່ພຣະອົງຊົງຫ່ວງໃຍພວກເຂົາ?[5]ພຣະອົງໄດ້ຊົງ
ສ້າງພວກເຂົາໃຫ້ຕ່ຳກວ່າຊາວສະຫວັນພຽງຫນ້ອຍດຽວ ແລະໄດ້ຊົງສວມສະຫງ່າຣາສີແລະກຽດຕິຍົດໃຫ້ແກ່ພວກເຂົາ.
[6]ພຣະອົງຊົງໃຫ້ເຂົາຄອບຄອງເໜືອເຫລົ່າທຸກໆສິ່ງທີ່ໄດ້ສ້າງມາດ້ວຍມືຂອງພຣະອົງ; ພຣະອົງໄດ້ໃຫ້ສິ່ງທັງປວງຢູ່ໃຕ້ຝາຕີນຂອງເຂົາ:[7]ຄືຝູງ
ແກະ ແລະຝູງງົວທັງຫມົດ, ແມ່ນແຕ່ບັນດາສັດຕ່າງໆ ແຫ່ງທ້ອງທົ່ງ,[8]ເຫລົ່ານົກໃນທ້ອງຟ້າທັງປວງ, ແລະປາໃນທ້ອງທະເລ, ລວມເຖິງທຸກສິ່ງທີ່ໄປ
ມາຕາມກະແສແຫ່ງທະເລທັງຫລາຍ.
[9]ພຣະຢາເວອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍທັງຫລາຍ, ພຣະນາມຊື່ຂອງພຣະອົງສູງສົ່ງຍິ່ງໃຫຍ່ທົ່ວທັງແຜ່ນດິນໂລກ!

 generated on Tue Jun 17 19:01:42 2025

9 ເຖິງບັນດານັກດົນຕຣີ; ຕັ້ງໃນແບບມັທ ລັບເບນ. ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍຈະຂອບພຣະຄຸນພຣະຢາເວຈາກສ່ວນເລິກຂອງ
ຫົວໃຈຂອງຂ້ານ້ອຍ; ຂ້ານ້ອຍຈະເລົ່າເຖິງສິ່ງຍິ່ງໃຫຍ່ອັສະຈັນທັງຫມົດຂອງພຣະອົງ.[2]ຂ້ານ້ອຍຈະຍິນດີແລະຊົມຊື່ນໃນພຣະອົງ; ຂ້ານ້ອຍຈະ
ຮ້ອງເພງສັນຣະເສີນແດ່ພຣະນາມຊື່, ຂອງພຣະອົງຜູ້ສູງສຸດ!

[3]ເມື່ອເຫລົ່າສັດຕຣູຂອງຂ້ານ້ອຍຫັນຫລັງກັບ, ພວກເຂົາກໍລົ້ມລົງແລະສູນຫາຍໄປຕໍ່ຫນ້າຂອງພຣະອົງ.[4]ເພາະພຣະອົງໄດ້ຊົງປົກປ້ອງຄວາມຍຸຕິ
ທັມໃຫ້ແກ່ຂ້ານ້ອຍ; ພຣະອົງຊົງປຣະທັບເທິງບັນລັງຂອງພຣະອົງ, ຊົງຕັດສິນຢ່າງຊອບທັມ!
[5]ພຣະອົງໄດ້ຊົງຕັດສິນຊົນຊາດຕ່າງໆ; ພຣະອົງໄດ້ຊົງທຳລາຍຄົນຊົ່ວ; ພຣະອົງໄດ້ຊົງລົບຊື່ຂອງພວກເຂົາອອກໄປຕະຫລອດ ແລະເປັນນິຣັນ.
[6]ສັດຕຣູກໍຖືກດັບສູນຫາຍໄປເມື່ອພຣະອົງຊົງເອົາເມືອງຕ່າງໆຂອງພວກເຂົາ. ອານຸສອນທັງຫມົດຂອງພວກເຂົາກໍສູນຫາຍໄປ.
[7]ແຕ່ພຣະຢາເວຊົງດຳຣົງຢູ່ຕະຫລອດໄປ; ພຣະອົງໄດ້ຊົງຕັ້ງບັນລັງຂອງພຣະອົງໄວ້ເພື່ອຄວາມຍຸຕິທັມ.[8]ພຣະອົງຈະຊົງພິພາກສາໂລກດ້ວຍຄວາມ
ຊອບທັມ, ແລະພຣະອົງຈະຊົງຕັດສິນຊົນຊາດທັງຫລາຍດ້ວຍຄວາມທ່ຽງທັມ.
[9]ພຣະຢາເວຈະຊົງເປັນທີ່ກຳບັງອັນເຂັ້ມແຂງແກ່ຄົນທີ່ຖືກກົດຂີ່ຂົ່ມເຫັງ, ຊົງເປັນທີ່ກຳບັງອັນເຂັ້ມແຂງໃນຍາມລຳບາກ.[10]ບັນດາຜູ້ທີ່ຮູ້ຈັກພຣະ
ນາມຊື່ຂອງພຣະອົງກໍໄວ້ວາງໃຈໃນພຣະອົງ, ຂ້າແດ່ພຣະຢາເວ, ເພາະພຣະອົງບໍ່ຊົງຖິ້ມບັນດາຜູ້ທີ່ສະແຫວງຫາພຣະອົງ.
[11]ຈົ່ງຮ້ອງເພງສັນຣະເສີນແດ່ພຣະຢາເວ, ຜູ້ຊົງຄອບຄອງໃນຊີໂອນ;ຈົ່ງບອກຊົນຊາດທັງຫລາຍເຖິງສິ່ງທີ່ພຣະອົງໄດ້ເຮັດ.[12]ເພາະວ່າ ພຣະເຈົ້າຜູ້
ຊົງແກ້ແຄ້ນແທນການຫລັ່ງເລືອດບໍ່ລືມໄລ; ພຣະອົງບໍ່ຊົງລືມສຽງຮ້ອງໄຫ້ຂອງຜູ້ຖືກຂົ່ມເຫັງ.
[13]ຂໍຊົງໂຜດເມດຕາແກ່ຂ້ານ້ອຍ, ພຣະຢາເວ; ຂໍຊົງແນມເບິ່ງການທີ່ຂ້ານ້ອຍຖືກຂົ່ມເຫັງຈາກຜູ້ທີ່ກຽດຊັງຂ້ານ້ອຍ, ພຣະອົງຊົງເປັນຜູ້ທີ່ສາມາດ
ຊ່ວຍຂ້ານ້ອຍອອກຈາກປະຕູແຫ່ງຄວາມຕາຍໄດ້.[14]ໂອ້, ເພື່ອຂ້ານ້ອຍຈະກ່າວຮ້ອງຄຳສັນຣະເສີນທັງປວງຂອງພຣະອົງ. ໃນປະຕູແຫ່ງລູກສາວຊີ
ໂອນ ຂ້າພຣະອົງຈະຊື່ນຊົມຍິນດີໃນຄວາມລອດຂອງພຣະອົງ!
[15]ຊົນຊາດທັງຫລາຍໄດ້ຈົມລົງໄປໃນຂຸມທີ່ພວກເຂົາໄດ້ຂຸດໄວ້; ຕີນຂອງພວກເຂົາຕິດຕາຂ່າຍທີ່ພວກເຂົາໄດ້ຫ້າງເອົາໄວ້.[16]ພຣະຢາເວໄດ້ຊົງສຳ
ແດງພຣະອົງເອງໃຫ້ເປັນທີ່ຮູ້ຈັກ; ພຣະອົງໄດ້ຊົງພິພາກສາ; ຄົນຊົ່ວໄດ້ຕິດກັບດັກດ້ວຍການກະທຳຂອງຕົນເອງ. ເສລາ
[17]ບັນດາຄົນຊົ່ວຕ່າງກໍຫັນກັບແລະຖືກສົ່ງໄປຍັງແດນຄົນຕາຍ, ນີ້ຄືປາຍທາງຂອງປະຊາຊົນທັງຫມົດທີ່ລືມພຣະເຈົ້າ.[18]ເພາະຄົນຂັດສົນຈະບໍ່ຖືກ
ລືມຢູ່ສະເຫມີໄປ, ແລະຄວາມຫວັງຂອງຄົນທີ່ຖືກຂົ່ມເຫັງຈະບໍ່ສູນຫາຍຕະຫລອດໄປເປັນນິດ.
[19]ຂໍຊົງລຸກຂຶ້ນ, ພຣະຢາເວ; ຢ່າໃຫ້ມະນຸດມີຊັຍເຫນືອພຣະອົງໄດ້; ຂໍໃຫ້ຊົນຊາດຕ່າງໆ ຖືກພິພາກສາໃນສາຍຕາຂອງພຣະອົງ.[20]ຂໍຊົງເຮັດໃຫ້
ພວກເຂົາຢ້ານກົວ, ພຣະຢາເວ; ໃຫ້ຊົນຊາດທັງຫລາຍໄດ້ຮູ້ວ່າເຂົາເປັນພຽງແຕ່ມະນຸດເທົ່ານັ້ນ. ເສລາ


generated on Tue Jun 17 19:01:42 2025

10 [1]ເປັນຫຍັງ, ຂ້າແດ່ພຣະຢາເວ, ເຫດໃດພຣະອົງປຣະທັບຢູ່ຫ່າງໄກ? ເຫດໃດພຣະອົງຊົງຫລົບຊ່ອນພຣະອົງເສຍໃນຍາມລໍາບາກ?[2]ເພາະ
ຄວາມຍິ່ງຍະໂສຂອງພວກເຂົາ, ພວກຄົນຊົ່ວໄດ້ໄລ່ຕາມຄົນທີ່ຖືກຂົ່ມເຫັງ; ແຕ່ຂໍຊົງໂຜດໃຫ້ຄົນຊົ່ວ ຕິດກັບດັກແຜນຮ້າຍ ທີ່ພວກເຂົາໄດ້
ວາງໄວ້.[3]ເພາະຄົນຊົ່ວໂອ້ອວດຄວາມປຣາຖນາເລິກໆໃນໃຈຂອງເຂົາ; ເຂົາໃຫ້ພອນແກ່ຄົນໂລບແລະດູຫມິ່ນພຣະຢາເວ.

[4]ຄົນຊົ່ວກໍເຊີດຫນ້າ; ເຂົາບໍ່ໄດ້ສະແຫວງຫາພຣະເຈົ້າ. ເຂົາບໍ່ເຄີຍຄິດເຖິງພຣະເຈົ້າ ເພາະເຂົາບໍ່ສົນໃຈກ່ຽວກັບພຣະອົງເລີຍ.[5]ເຂົາກໍຫມັ້ນຄົງຢູ່
ຕະຫລອດເວລາ, ແຕ່ກົດເກນອັນຊອບທັມຂອງພຣະອົງກໍສູງເກີນໄປສໍາຫລັບເຂົາ; ເຂົາກ່າວຄວາມຮ້າຍໃສ່ສັດຕຣູທັງຫມົດຂອງເຂົາ.
[6]ເຂົາຄິດໃນໃຈວ່າ,"ເຮົາຈະບໍ່ພາດທ່າເສຍທີ; ເຮົາຈະບໍ່ພົບຄວາມເດືອດຮ້ອນໃນຕະຫລອດທຸກຊົ່ວເຊື້ອຊາດ."[7]ປາກຂອງເຂົາເຕັມໄປດ້ວຍຄໍາ
ສາບແຊ່ງແລະຄໍາຫລອກລວງ, ຄໍາໃສ່ຮ້າຍ; ລີ້ນຂອງເຂົາຊົ່ວຮ້າຍແລະທໍາລາຍ.
[8]ເຂົາຜົກຈອບລໍຖ້າຢູ່ໃກ້ຫມູ່ບ້ານທັງຫລາຍ; ເຂົາລັກຂ້າຄົນບໍ່ຣິສຸດໃນທີ່ລັບ; ຕາຂອງເຂົາເບິ່ງຫາເຫຍື່ອບໍ່ມີທີ່ເພິ່ງ.[9]ເຂົາຈອບໃນທີ່ລັບເຫມືອນສິງ
ຖ້າຄຸບໃນທີ່ກໍາບັງ; ເຂົານອນຖ້າເພື່ອຄອຍຈັບຄົນທີ່ຖືກຂົ່ມເຫັງ, ເມື່ອເຂົາຖືກດຶງເຂົ້າມາຕິດຕາຂ່າຍຂອງເຂົາ.[10]ເຫຍື່ອຂອງເຂົາຖືກຂະຢໍ້າແລະ
ຖືກທຸບຕີ; ພວກເຂົາລົ້ມລົງໃນຕາຂ່າຍທີ່ຫນຽວແຫນ້ນຂອງເຂົາ.
[11]ເຂົາຄິດໃນໃຈຂອງເຂົາວ່າ, "ພຣະເຈົ້າໄດ້ຊົງລືມໄປແລ້ວ; ພຣະອົງຊົງປິດຕາຂອງພຣະອົງເສຍ; ພຣະອົງຈະບໍ່ຊົງສົນໃຈທີ່ຈະເບິ່ງເລີຍ."[12]ຂໍຊົງ
ລຸກຂຶ້ນ, ພຣະຢາເວ! ຂໍຊົງຍົກມືຂອງຂ້າພະເຈົ້າ, ຂ້າແດ່ພຣະເຈົ້າ! ຂໍຊົງຢ່າລືມຄົນທີ່ຖືກຂົ່ມເຫັງ.
[13]ເຫດໃດຄົນຊົ່ວປະຕິເສດພຣະເຈົ້າ ແລະຄິດໃນໃຈຂອງເຂົາວ່າ, "ພຣະອົງຈະບໍ່ຊົງຖືໂທດເຮົາບໍ"?[14]ພຣະອົງໄດ້ຊົງເຫັນແລ້ວ, ເພາະ ພຣະອົງ
ຊົງແນມເຫັນຜູ້ທີ່ເດືອດຮ້ອນແລະທົນທຸກຢູ່ສະເຫມີ. ຄົນຂາດທີ່ເພິ່ງມອບຕົວໄວ້ກັບພຣະອົງ; ພຣະອົງຊົງຊ່ວຍເຫລືອລູກກໍາພ້າ.
[15]ຂໍຊົງຫັກແຂນຂອງຄົນຊົ່ວຮ້າຍ. ແລະຊົງໃຫ້ເຂົາໄດ້ຮັບຜົນກັມຊົ່ວຂອງເຂົາ ຊຶ່ງເຂົາຄິດວ່າພຣະອົງບໍ່ມີທາງຮູ້.[16]ພຣະຢາເວຊົງເປັນ
ພຣະມະຫາກະສັດສືບໄປ; ຊົນຊາດຕ່າງໆ ຖືກໄລ່ອອກຈາກແຜ່ນດິນຂອງ ພຣະອົງ.
[17]ຂ້າແດ່ພຣະຢາເວ, ພຣະອົງຊົງໄດ້ຍິນຄວາມຕ້ອງການ ຂອງຄົນທີ່ຖືກຂົ່ມເຫັງ; ພຣະອົງຊົງປຣະທານກໍາລັງໃຈແກ່ພວກເຂົາ, ພຣະອົງຊົງຟັງຄໍາ
ອະທິຖານຂອງພວກເຂົາ;[18]ພຣະອົງຊົງປ້ອງກັນລູກກໍາພ້າ ແລະຄົນທີ່ຖືກຂົ່ມເຫັງ ເພື່ອທີ່ມະນຸດຄົນໃດເທິງໂລກຈະບໍ່ເຮັດໃຫ້ເຂົາຢ້ານກົວໄດ້ອີກຕໍ່
ໄປ.


generated on Tue Jun 17 19:01:42 2025

11 ສຳຫລັບນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍລີ້ພັຍໃນພຣະຢາເວ; ທ່ານຈະເວົ້າກັບຂ້ານ້ອຍເຊັ່ນນີ້ ຫລືວ່າ "ຈົ່ງຫນີໄປທີ່ພູ
ເຂົາ ເຫມືອນກັບນົກ"?[2]ເພາະເບິ່ງເຖີດ! ຄົນຊົ່ວກົ່ງຄັນທະນູຂອງພວກເຂົາ. ພວກເຂົາເອົາລູກທະນູພາດໄວ້ທີ່ສາຍແລ້ວ ພ້ອມທີ່ຈະຍິງໄປໃນ
ຄວາມມືດໃຫ້ຖືກທີ່ໃຈຄົນທ່ຽງທັມ.

[3]ເພາະຖ້າຮາກຖານຖືກທຳລາຍໄປເສຍແລ້ວ, ຄົນຊອບທັມຈະເຮັດຫຍັງໄດ້?[4]ພຣະຢາເວ ຊົງສະຖິດໃນພຣະວິຫານອັນບໍຣິສຸດ, ຂອງພຣະອົງ
ສາຍຕາຂອງພຣະອົງຊົງເຝົ້າເບິ່ງ. ສາຍຕາຂອງພຣະອົງຊົງທົດສອບລູກຫລານຂອງມະນຸດ.
[5]ພຣະຢາເວ ຊົງທົດສອບທັງຄົນຊອບທັມແລະຄົນຊົ່ວ, ແຕ່ພຣະອົງຊົງກຽດຊັງຜູ້ທີ່ຮັກການກະທຳຮຸນແຮງ.[6]ພຣະອົງຊົງເທຖ່ານທີ່ລຸກໄຫມ້ແລະ
ໄຟກຳມະຖັນລົງເທິງຄົນຊົ່ວຮ້າຍ; ລົມຮ້ອນທີ່ເຜົາໄຫມ້ຈະເປັນສ່ວນແບ່ງຈາກຖ້ວຍຂອງພຣະອົງໃຫ້ແກ່ພວກເຂົາ![7]ເພາະພຣະຢາເວຊົງຊອບທັມ,
ແລະພຣະອົງຊົງຮັກຄວາມຊອບທັມ; ຄົນສັດຊື່ຈະຢູ່ຊ້ອງຫນ້າຂອງພຣະອົງ.

 generated on Tue Jun 17 19:01:42 2025

12 [1]ສຳຫລັບນັກດົນຕຣີ; ຕັ້ງເປັນສີມີນິດ. ບົດເພງສັນຣະເສີນຂອງດາວິດ.  ຂ້າແດ່ພຣະຢາເວ, ຂໍຊົງໂຜດຊ່ວຍດ້ວຍເຖີດ; ເພາະຄົນດີໄດ້ຫາຍ
ໄປຫມົດ ຄົນທີ່ຊື່ສັດໄດ້ສູນຫາຍໄປ.

[2]ທຸກຄົນເວົ້າຄຳຕົວະກັບເພື່ອນບ້ານ; ທຸກຄົນເວົ້າດ້ວຍລີ້ນປະຈົບປະແຈງ ແລະດ້ວຍສອງໃຈ.[3]ຂ້າແດ່ພຣະຢາເວ, ຂໍຊົງຕັດປາກທີ່ປະຈົບປະແຈງ
ອອກໃຫ້ຫມົດ, ແລະທຸກລີ້ນທີ່ໂອ້ອວດໃນເລື່ອງໃຫຍ່ໂຕດ້ວຍ.[4]ຄົນພວກນີ້ຄືບັນດາຄົນທີ່ພາກັນເວົ້າວ່າ, "ເຮົາຈະຊະນະໄດ້ດ້ວຍລີ້ນຂອງເຮົາ.
ເມື່ອປາກຂອງເຮົາເວົ້າ, ໃຜຈະເປັນນາຍເຫນືອພວກເຮົາໄດ້?
[5]"ເພາະຄົນຍາກຈົນຖືກທຳຮ້າຍຢ່າງຮຸນແຮງ, ເພາະສຽງຄວນຄາງຂອງຄົນຂັດສົນ, ຈຶ່ງຈະລຸກຂຶ້ນ, ພຣະຢາເວກ່າວວ່າ. "ຂ້ອຍຈະຈັດທີ່
ໃຫ້ປອດພັຍໄວ້ໃຫ້ຕາມທີ່ພວກເຂົາປຣາຖນາ."
[6]ພຣະສັນຍາຂອງພຣະຢາເວເປັນພຣະສັນຍາບໍຣິສຸດ, ເປັນດັ່ງເຊັ່ນເງິນບໍຣິສຸດໃນເຕົາຫລອມແຫ່ງແຜ່ນດິນໂລກ, ຊຶ່ງຖືກຫລອມເຖິງເຈັດຄັ້ງ.[7]ພ
ຣະອົງຊົງເປັນພຣະຢາເວ! ພຣະອົງຊົງປ້ອງກັນພວກເຂົາໄວ້. ພຣະອົງຊົງຮັກສາຄົນສັດຊື່ໄວ້ຕະຫລອດໄປຈາກຄົນໃນຊົ່ວອາຍຸທີ່ຊົ່ວຮ້າຍນີ້.[8]ຄົນ
ຊົ່ວກໍຢູ່ທຸກຫົນທຸກແຫ່ງ ໃນຂະນະທີ່ຄວາມຊົ່ວຮ້າຍໄດ້ຮັບການຍົກຍ້ອງໃນທ່າມກາງບັນດາລູກຫລານຂອງມະນຸດ.


generated on Tue Jun 17 19:01:42 2025

13 [1]ສຳຫລັບນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ. ອີກດົນປານໃດ, ຂ້າແດ່ພຣະຢາເວ, ພຣະອົງຈະຊົງລືມຂ້ານ້ອຍ? ອີກນານປານໃດພ
ຣະອົງຈະລີ້ໜ້າຂອງພຣະອົງຈາກຂ້ານ້ອຍ?[2]ອີກນານປານໃດທີ່ຂ້ານ້ອຍຕ້ອງກັງວົນແລະໂສກເສົ້າໃນໃຈຕະຫລອດທັງມື້? ອີກນານປານໃດ
ທີ່ສັດຕຣູຂອງຂ້ານ້ອຍມີຊັຍເຫນືອຂ້ານ້ອຍ?

[3]ຂໍຊົງຫລຽວເບິ່ງຂ້ານ້ອຍແລະຊົງຕອບຂ້ານ້ອຍ! ໂຜດປຣະທານແສງສະຫວ່າງແກ່ດວງຕາຂອງຂ້ານ້ອຍ, ຫລືຢ້ານວ່າຂ້ານ້ອຍຈະຫລັບໄຫລຢູ່
ໃນຄວາມຕາຍ.[4]ຂໍຢ່າປ່ອຍໃຫ້ສັດຕຣູຂອງຂ້ານ້ອຍກ່າວວ່າ, "ເຮົາໄດ້ຊະນະເຂົາແລ້ວ"; ເພື່ອສັດຕຣູຂອງຂ້ານ້ອຍຈະບໍ່ເວົ້າວ່າ
"ເຮົາໄດ້ມີຊັຍເຫນືອສັດຕຣູຂອງເຮົາແລ້ວ" ບໍ່ເຊັ່ນນັ້ນ ສັດຕຣູຂອງຂ້ານ້ອຍຈະຫນຳໃຈເມື່ອຂ້ານ້ອຍລົ້ມລົງ.
[5]ແຕ່ຂ້ານ້ອຍໄດ້ໄວ້ວາງໃຈໃນຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງ; ຈິດໃຈຂອງຂ້ານ້ອຍຊື່ນຊົມຍິນດີໃນການຊ່ອຍໃຫ້ພົ້ນຂອງພຣະອົງ.
[6]ຂ້ານ້ອຍຈະຮ້ອງເພງແດ່ພຣະຢາເວ ເພາະພຣະອົງໄດ້ຊົງດູແລຂ້ານ້ອຍດ້ວຍໃຈກວ້າງຂວາງ.


generated on Tue Jun 17 19:01:42 2025

14 [1]ສຳຫລັບນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ. ຄົນໂງ່ຄິດຢູ່ໃນໃຈຂອງເຂົາວ່າ, "ບໍ່ມີພຣະເຈົ້າ." ພວກເຂົາກໍຊົ່ວຊ້າແລະໄດ້ເຮັດ
ຄວາມຜິດທີ່ ຫນ້າກຽດຫນ້າຊັງ; ບໍ່ມີໃຜເຮັດດີເລີຍ.

[2]ພຣະຢາເວຊົງຫລຽວເບິ່ງລົງມາຈາກສະຫວັນ ບັນດາລູກຂອງມະນຸດທັງຫລາຍ ເພື່ອເບິ່ງວ່າມີໃຜທີ່ເຂົ້າໃຈແນ່, ມີໃຜທີ່ສະແຫວງຫາພຣະອົງ
ແນ່.[3]ພວກເຂົາທັງປວງຕ່າງຫັນຫນີໄປກັນຫມົດ. ພວກເຂົາກໍຊົ່ວຊ້າລົງພ້ອມກັນ, ບໍ່ມີໃຜເຮັດດີ, ບໍ່ມີໃຜເລີຍ, ແມ່ນແຕ່ຄົນດຽວ
[4]ພວກເຂົາບໍ່ຮູ້ຫຍັງກັນເລີຍບໍ, ບັນດາຄົນທີ່ເຮັດຄວາມຜິດບາບ, ບັນດາຄົນທີ່ກືນກິນປະຊາກອນຂອງເຮົາ ດັ່ງພວກເຂົາກິນອາຫານ, ແຕ່ຜູ້ທີ່ບໍ່ໄດ້
ພາວັນນາອະທິຖານຫາພຣະຢາເວ?
[5]ພວກເຂົາຕົວສັ່ນດ້ວຍຄວາມຢ້ານ, ເພາະພຣະເຈົ້າຊົງສະຖິດຢູ່ກັບ ທີ່ຊຸມນຸມຂອງຄົນຊອບທັມ![6]ພວກເຈົ້າຕ້ອງການເຮັດໃຫ້ຄົນຍາກຈົນຂາຍ
ຫນ້າ ແມ່ນວ່າພຣະຢາເວຊົງເປັນທີ່ລີ້ພັຍຂອງເຂົາ.
[7]ໂອ ຄວາມລອດຂອງອິສະຣາເອນຈະມາຈາກຊີໂອນ! ເມື່ອພຣະຢາເວຊົງນຳປະຊາຊົນພຣະອົງກັບຈາກການເປັນນັກໂທດ, ແລ້ວຢາໂຄບກໍ
ຈະຊື່ນຊົມຍິນດີແລະອິສະຣາເອນຈະຍິນດີ!


generated on Tue Jun 17 19:01:42 2025

15 1 ບົດເພງສັນຣະເສີນຂອງດາວິດ. ຂ້າແດ່ພຣະຢາເວ ຜູ້ໃດຈະອາສັຍຢູ່ໃນພຣະວິຫານຂອງພຣະອົງໄດ້? ຜູ້ໃດຈະອາສັຍຢູ່ເທິງເນີນພູເຂົາອັບໍ
◌ໍຣິສຸດຂອງພຣະອົງໄດ້? 2 ຄືຜູ້ທີ່ດຳເນີນຊີວິດຢ່າງສັດຊື່ ເຮັດສິ່ງທີ່ຖືກຕ້ອງແລະເວົ້າຄວາມຈິງຈາກໃຈຂອງເຂົາ.

3 ເຂົາບໍ່ໃສ່ຮ້າຍຄົນອື່ນດ້ວຍລີ້ນຂອງເຂົາ, ເຂົາບໍ່ທຳຮ້າຍຄົນອື່ນ ແລະເຂົາບໍ່ດູຫມິ່ນເພື່ອນບ້ານຂອງເຂົາ.
4 ຄົນທີ່ບໍ່ມີຄ່າເປັນທີ່ດູຖູກໃນສາຍຕາຂອງເຂົາ, ແຕ່ເຂົາໃຫ້ກຽຕແກ່ບັນດາຄົນທີ່ຍຳເກງພຣະຢາເວ. ເຂົາສາບານໂດຍຍອມໃຫ້ຕົນເອງເສຍປຽບ
ແລະບໍ່ກັບຄຳສັນຍາທັງຫລາຍຂອງເຂົາ. 5 ເຂົາບໍ່ຄິດດອກເບ້ຍເມື່ອເຂົາໃຫ້ຢືມເງິນ. ເຂົາບໍ່ຮັບສິນບົນ ເພື່ອເປັນພະຍານໃສ່ຮ້າຍຜູ້ບໍ່ຣິສຸດ. ຜູ້ທີ່
ເຮັດສິ່ງເຫລົ່ານີ້ຈະບໍ່ມີທາງຫວັ່ນໄຫວໄດ້ເລີຍ.

 generated on Tue Jun 17 19:01:42 2025

16 [1]ບົດເພງສັນຣະເສີນໂດຍດາວິດ. ຂ້າແດ່ພຣະເຈົ້າ, ຂໍຊົງຄຸ້ມຄອງຂ້ານ້ອຍ, ເພາະຂ້ານ້ອຍລີ້ພັຍໃນພຣະອົງ.[2]ຂ້ານ້ອຍທູນພຣະຢາເວວ່າ,
"ພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າ; ຂອງຂ້ານ້ອຍນອກຈາກພຣະອົງແລ້ວ.ຂ້ານ້ອຍບໍ່ມີຄວາມດີປະການໃດເລີຍ.[3]ສ່ວນບັນດາຜູ້ສັດຊື່ອາ
ສັຍຢູ່ແຜ່ນດິນໂລກ, ພວກເຂົາເປັນຄົນດີມີສີລະທັມ; ຂ້ານ້ອຍຊື່ນຊົມຍິນດີຢ່າງຍິ່ງໃນພວກເຂົາ.

[4]ບັນດາຜູ້ທີ່ສະແຫວງຫາພະອື່ນໆ, ຄວາມທຸກຍາກຂອງພວກເຂົາຈະເພີ່ມຂຶ້ນ. ຂ້ານ້ອຍຈະບໍ່ຮ່ວມເຄື່ອງດື່ມບູຊາດ້ວຍເລືອດໃຫ້ແກ່ບັນດາພະ
ຂອງພວກເຂົາ ຫລືຍົກຍ້ອງນາມພະເຫລົ່ານັ້ນດ້ວຍປາກຂອງຂ້ານ້ອຍ.
[5]ຂ້າແດ່ພຣະເຢເວ, ພຣະອົງຊົງເປັນມໍຣະດົກສ່ວນທີ່ແບ່ງໄວ້ຂອງຂ້ານ້ອຍແລະຊົງເປັນຈອກຂອງຂ້ານ້ອຍ. ພຣະອົງຊົງຖືປາຍທາງຂອງຂ້ານ້ອຍ
ໄວ້.[6]ເຊືອກວັດໄດ້ຖືກວາງໄວ້ແລ້ວໃນດິນແດນທີ່ຮົ່ມເຢັນ; ມໍຣະດົກທີ່ຮົ່ມເຢັນນັ້ນເປັນຂອງຂ້ານ້ອຍ.
[7]ຂ້ານ້ອຍຈະຖວາຍຄໍາຍ້ອງຍໍສັນຣະເສີນ,ແດ່ພຣະຢາເວ ຜູ້ຊົງປຣະທານຄໍາປຶກສາໃຫ້ແກ່ຂ້ານ້ອຍ; ແມ່ນໃນຍາມຄໍ່າຄືນພຣະອົງກໍຊົງສັ່ງສອນ
ໃນຄວາມຄິດຂອງຂ້ານ້ອຍ.[8]ຂ້ານ້ອຍຕັ້ງພຣະຢາເວ ໄວ້ຕໍ່ຫນ້າຂ້ານ້ອຍສະເຫມີ. ເພື່ອຂ້ານ້ອຍຈະບໍ່ຫວັ່ນໄຫວ ໄປຈາກມືເບື້ອງຂວາຂອງພຣະ
ອົງ.
[9]ສະນັ້ນໃຈຂອງຂ້ານ້ອຍຈຶ່ງຍິນດີ ສັກສີຂອງຂ້ານ້ອຍຮຸ່ງເຮືອງ ແນ່ນອນ. ຂ້ານ້ອຍຈະອາສັຍຢູ່ຢ່າງປອດພັຍ.[10]ເພາະພຣະອົງຈະບໍ່ຊົງປ່ອຍໃຫ້ຈິດ
ໃຈຂອງຂ້ານ້ອຍຖືກຖິ້ມໄວ້ໃນແດນແຫ່ງຄວາມຕາຍ. ພຣະອົງຈະບໍ່ຊົງປ່ອຍໃຫ້ຄົນຊື່ສັດຂອງພຣະອົງໄດ້ເຫັນຫລຸມນັ້ນ.
[11]ພຣະອົງຊົງສອນເສັ້ນທາງແຫ່ງຊີວິດແກ່ຂ້ານ້ອຍ; ຕໍ່ຫນ້າຂອງພຣະອົງມີຄວາມຊື່ນຊົມຍິນດີຢ່າງເຫລືອລົ້ນ; ໃນມືຂວາຂອງພຣະອົງມີຄວາມປີ
ຕິຍິນດີຢູ່ຕະຫລອດ!"


generated on Tue Jun 17 19:01:42 2025

17 ຄຳອະທິຖານໂດຍດາວິດ.[1]ຂໍຊົງຟັງຄຳຮ້ອງຂໍຄວາມຍຸຕິທັມຂອງຂ້ານ້ອຍ, ພຣະຢາເວ; ຂໍຊົງສົນໃຈຕໍ່ຄຳຮ້ອງຂໍຄວາມຊ່ວຍເຫລືອຂອງຂ້າ
ນ້ອຍ! ຂໍຊົງງ່ຽງຫູຟັງຄຳອະທິຖານ ຈາກປາກທີ່ບໍ່ມີການຫລອກລວງຂອງຂ້ານ້ອຍ.[2]ຂໍໃຫ້ການຊະນະຄວາມຂອງຂ້ານ້ອຍ; ມາຈາກເບື້ອງ
ຫນ້າຂອງພຣະອົງ ຂໍຕາຂອງພຣະອົງຊົງເຫັນສິ່ງທີ່ຖືກຕ້ອງ!

[3]ຖ້າພຣະອົງຊົງທົດສອບຈິດໃຈຂອງຂ້ານ້ອຍ, ຖ້າພຣະອົງມາຫາຂ້ານ້ອຍໃນເວລາກາງຄືນ, ພຣະອົງຈະຊົງຊໍາຣະຂ້ານ້ອຍໃຫ້ບໍຣິສຸດແລະຈະບໍ່
ພົບແຜນການຊົ່ວໃດໆເລີຍ; ປາກຂອງຂ້ານ້ອຍຈະບໍ່ເວົ້າຄຳຕົວະ.
[4]ສ່ວນການກະທຳທັງຫລາຍຂອງມະນຸດນັ້ນ, ເປັນເພາະພຣະຄັມ ຈາກຮີມສົບປາກຂອງພຣະອົງທີ່ຮັກສາຂ້ານ້ອຍໄວ້ ຈາກທາງຂອງຄົນຊົ່ວ.[5]ຂ້າ
ນ້ອຍຈະກ້າວເດີນແລະຍຶດຫມັ້ນໃນທາງຂອງພຣະອົງ; ຕີນຂອງຂ້ານ້ອຍບໍ່ຫລີກຫນີຈາກທາງຂອງພຣະອົງ.
[6]ຂ້າແດ່ພຣະເຈົ້າ, ຂ້ານ້ອຍອະທິຖານຕໍ່ພຣະອົງ, ເພື່ອຂໍພຣະອົງຊົງຕອບຂ້ານ້ອຍ, ຂໍຊົງຫັນມາຟັງຂ້ານ້ອຍເມື່ອຂ້ານ້ອຍກາບທູນ.[7]ຂໍຊົງສຳແດງ
ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງຢ່າງມະຫັດສະຈັນ, ຂ້າແດ່ພຣະອົງຜູ້ຊົງຊ່ວຍບັນດາຜູ້ລີ້ພັຍໃນພຣະອົງໃຫ້ລອດພົ້ນຈາກເຫລົ່າສັດຕຣູ
ຂອງພວກເຂົາໂດຍມືຂວາຂອງພຣະອົງ!
[8]ຂໍຊົງປົກປ້ອງຂ້ານ້ອຍດັ່ງແກ້ວຕາຂອງພຣະອົງ; ຂໍຊົງເຊື່ອງຂ້ານ້ອຍ ໄວ້ພາຍໃຕ້ຮົ່ມປີກຂອງພຣະອົງ[9]ໃຫ້ພົ້ນຈາກຫນ້າຂອງຄົນຊົ່ວຜູ້ມາທຳຮ້າຍ
ຂ້ານ້ອຍ, ພົ້ນຈາກສັດຕຣູຂອງຂ້ານ້ອຍ ຜູ້ລ້ອມຂ້າງຂ້ານ້ອຍຢູ່.[10]ພວກເຂົາບໍ່ມີຄວາມເມດຕາຕໍ່ທຸກຄົນ ປາກຂອງພວກເຂົາເວົ້າໂອ້ອວດຈອງຫອງ.
[11]ພວກເຂົາໄດ້ປິດລ້ອມກ້າວເດີນຂອງຂ້ານ້ອຍ. ພວກເຂົາໄດ້ຈັບຕາຖ້າໂຍນຂ້ານ້ອຍລົງພື້ນ.[12]ພວກເຂົາເປັນເຫມືອນສິງທີ່ຊອກຫາເຫຍື່ອ ເປັນສິງ
ຫນຸ່ມລັກຢູ່ໃນທີ່ລັບ.
[13]ຂ້າແດ່ພຣະຢາເວ, ຂໍຊົງລຸກຂຶ້ນ! ຂໍຊົງໂຈມຕີພວກເຂົາ ຂໍຊົງໂຍນພວກເຂົາໃຫ້ຫນ້າຂວ້ຳ! ຂໍຊົງຊ່ວຍກູ້ຊີວິດ ຂອງຂ້ານ້ອຍຈາກຄົນຊົ່ວດ້ວຍ
ດາບຂອງພຣະອົງ![14]ຂ້າແດ່ພຣະຢາເວ, ຂໍຊົງຊ່ວຍກູ້ຂ້ານ້ອຍໃຫ້ພົ້ນຈາກຄົນເຫລົ່ານັ້ນ ດ້ວຍມືຂອງພຣະອົງ, ຈາກພວກມະນຸດຂອງໂລກນີ້ ທີ່
ຄວາມຮັ່ງມີຂອງເຂົາ ຢູ່ແຕ່ໃນຊີວິດນີ້ເທົ່ານັ້ນ! ພຣະອົງຈະຊົງໃຫ້ທ້ອງຂອງຄົນ ທີ່ພຣະອົງຊົງຮັກອີ່ມດ້ວຍຄວາມຮັ່ງມີ; ພວກເຂົາຈະມີລູກຫລານ
ຫລວງຫລາຍ ແລະຈະຖິ້ມຄວາມຮັ່ງມີຂອງພວກເຂົາ ໄວ້ໃຫ້ແກ່ລູກຫລານຂອງພວກເຂົາ.
[15]ແຕ່ສຳລັບຂ້ານ້ອຍ, ຂ້ານ້ອຍຈະຢູ່ຕໍ່ຫນ້າຂອງພຣະອົງໃນຄວາມຊອບທັມ; ຂ້ານ້ອຍຈະໄດ້ອີ່ມໃຈ; ເມື່ອຂ້ານ້ອຍຕື່ນ, ດ້ວຍສະຫງ່າຣາສີຂອງພ
ຣະອົງ.

 generated on Tue Jun 17 19:01:42 2025

18 1ເຖິງບັນດານັກຮ້ອງ. ບົດເພງສັນຣະເສີນຂອງດາວິດ, ເປັນຜູ້ຮັບໃຊ້ຂອງພຣະເຈົ້າຢາເວ, ເມື່ອຮ້ອງເພງເຖິງພຣະຢາເວໂດຍຖ້ອຍຄຳຂອງ
ເພງໃນວັນທີ່ພຣະເຈົ້າຢາເວ ຮ້ອງອອກມາຈາກມືທັງຫມົດ ແລະຈາກມືຂອງຈິດວິນຍານ. ເພີ່ນຮ້ອງ: 1 ຂ້າແດ່ພຣະຢາເວ, ຂ້ານ້ອຍຮັກພ
ຣະອົງ, ຜູ້ຊົງເປັນກຳລັງຂອງຂ້ານ້ອຍ.

2ພຣະຢາເວຊົງເປັນພຣະສີລາຂອງຂ້ານ້ອຍ, ຊົງເປັນປ້ອມປາການຂອງຂ້ານ້ອຍ ຊົງເປັນຜູ້ທີ່ນຳຂ້ານ້ອຍໄປສູ່ຄວາມປອດພັຍ; ພຣະອົງຊົງເປັນພ
ຣະເຈົ້າຂອງຂ້ານ້ອຍ, ຊົງເປັນພຣະສີລາຂອງຂ້ານ້ອຍ, ຂ້ານ້ອຍລີ້ພັຍໃນພຣະອົງ. ພຣະອົງຊົງເປັນໂລ້ຂອງຂ້ານ້ອຍ, ເປັນເຂົາສັດແຫ່ງ
ຄວາມພົ້ນ ຂອງຂ້ານ້ອຍ ແລະຊົງເປັນທີ່ກຳບັງເຂັ້ມແຂງຂອງຂ້ານ້ອຍ. 3ຂ້ານ້ອຍຈະຮ້ອງຫາພຣະຢາເວ ຜູ້ຊົງສົມຄວນຮັບການສັນຣະເສີນ, ແລະ
ຂ້ານ້ອຍຈະລອດພົ້ນຈາກສັດຕຣູຂອງຂ້ານ້ອຍ.
4ສາຍໃຍແຫ່ງຄວາມຕາຍກໍອ້ອມຮອບຂ້ານ້ອຍ, ແລະສາຍນ້ຳແຫ່ງຄວາມທຳລາຍກໍໄຫລຖ້ວມຂ້ານ້ອຍ. 5ສາຍໃຍແຫ່ງແດນຄວາມຕາຍ
ອ້ອມຮອບຂ້ານ້ອຍ; ບັນດາບ້ວງແຫ່ງຄວາມຕາຍໄດ້ຫ້າງໃສ່ຂ້ານ້ອຍໄວ້.
6ໃນຄວາມທຸກໃຈຂອງຂ້ານ້ອຍ ຂ້ານ້ອຍໄດ້ຮ້ອງຫາພຣະຢາເວ; ຂ້ານ້ອຍໄດ້ຮ້ອງຫາຂໍຄວາມຊ່ວຍເຫລືອຕໍ່ພຣະເຈົ້າຂອງຂ້ານ້ອຍ. ພຣະອົງຊົງ
ຟັງສຽງຮ້ອງຂອງຂ້ານ້ອຍ ຈາກພຣະວິຫານຂອງພຣະອົງ; ສຽງຮ້ອງຂໍຄວາມຊ່ວຍເຫລືອຂອງຂ້ານ້ອຍ; ໄດ້ໄປເຖິງຕໍ່ຫນ້າຂອງພຣະອົງ ສຽງ
ຮ້ອງນັ້ນໄດ້ໄປເຖິງຫູຂອງພຣະອົງ.
7ແລ້ວແຜ່ນດິນໂລກກໍຖືກສັ່ນແລະສັ່ນສະເທືອນ; ຮາກຖານຂອງພູເຂົາທັງຫລາຍກໍສັ່ນສະເທືອນແລະຄອນແຄນເພາະພຣະເຈົ້າຊົງໂກດຮ້າຍ.
8ຄວັນໄດ້ພຸ່ງຂຶ້ນຈາກຮູດັງຂອງພຣະອົງ, ແລະໄຟໄດ້ພົ້ງອອກຈາກປາກຂອງພຣະອົງ. ຖ່ານກໍຕິດແປວໄຟນັ້ນ.
9ພຣະອົງໄດ້ຊົງເປີດຟ້າສະຫວັນ ແລະສະເດັດລົງມາ, ຄວາມມືດທຶບໄດ້ຢູ່ໃຕ້ຕີນຂອງພຣະອົງ. 10ພຣະອົງໄດ້ຊົງຂີ່ເຄຣຸບແລະເຫາະໄປ, ພຣະອົງ
ຊົງເຫາະໄປເທິງປີກຂອງລົມ.
11ພຣະອົງຊົງໃຫ້ຄວາມມືດແລະເມກຝົນຫນາທຶບໃນທ້ອງຟ້າເປັນເຜີງອ້ອມຮອບພຣະອົງ, 12ລູກເຫັບແລະຖ່ານໄຟຕົກອອກຈາກຟ້າແມບຕໍ່ເບື້ອງ
ຫນ້າຂອງພຣະອົງ.
13ພຣະຢາເວ, ຊົງສົ່ງສຽງດັງສະນັ່ນໃນຟ້າສະຫວັນ! ສຽງຂອງພຣະອົງຜູ້ສູງສຸດໄດ້ດັງລັ່ນອອກມາ. 14ພຣະອົງຊົງໄດ້ຍິງລູກສອນຂອງພຣະອົງ
ແລະຊົງເຮັດໃຫ້ສັດຕູຂອງພຣະອົງ ກະແຈກກະຈາຍໄປ; ຟ້າແມບຫລວງຫລາຍໄດ້ເຮັດໃຫ້ພວກເຂົາກະແຈກກະຈາຍໄປ.
15ແລ້ວນ້ຳກໍເປີດອອກເປັນຊ່ອງໃຫ້ເຫັນ, ພື້ນຂອງໂລກຖືກເປີດອອກ ດ້ວຍສຽງຮ້ອງເຂົ້າສູ່ສົງຄາມຂອງພຣະອົງ, ຂ້າແດ່ພຣະຢາເວ ດ້ວຍລົມ
ຫາຍໃຈທີ່ພຸ່ງອອກມາຈາກຮູດັງຂອງພຣະອົງ.
16ພຣະອົງໄດ້ຊົງເອື້ອມລົງມາຈາກເບື້ອງເທິງ; ພຣະອົງໄດ້ຊົງຈັບຂ້ານ້ອຍໄວ້ ພຣະອົງໄດ້ຊົງດຶງຂ້ານ້ອຍອອກມາຈາກນ້ຳໄຫລ. 17ພຣະອົງໄດ້ຊົງ
ຊ່ວຍກູ້ຂ້ານ້ອຍຈາກສັດຕຣູທີ່ແຂງແຮງຂອງຂ້ານ້ອຍ, ຈາກບັນດາຄົນທີ່ກຽດຊັງຂ້ານ້ອຍ ເພາະວ່າພວກເຂົາເຂັ້ມແຂງເກີນໄປສຳຫລັບຂ້ານ້ອຍ.
18ພວກເຂົາໄດ້ມາຕໍ່ສູ້ຂ້ານ້ອຍ ໃນມື້ແຫ່ງຄວາມທຸກໃຈຂອງຂ້ານ້ອຍ ແຕ່ພຣະຢາເວຊົງເປັນຜູ້ຄ້ຳຊູຂ້ານ້ອຍ! 19ພຣະອົງຊົງປ່ອຍໃຫ້ຂ້ານ້ອຍເປັນ
ອິສຣະ ໃນທີ່ໂລ່ງກວ້າງ; ພຣະອົງໄດ້ຊົງຊອ່ຍເຫລືອຂ້ານ້ອຍເພາະພຣະອົງໄດ້ຊົງພໍໃຈຂ້ານ້ອຍ.
20ພຣະຢາເວໄດ້ຊົງປຣະທານບຳເຫນັດລາງວັນແກ່ຂ້ານ້ອຍ ເພາະຄວາມຊອບທັມຂອງຂ້ານ້ອຍ; ພຣະອົງໄດ້ຊົງຊ່ວຍໃຫ້ຂ້ານ້ອຍ ໃຫ້ກັບຄືນ
ເພາະມືຂອງຂ້ານ້ອຍສະອາດ. 21ເພາະຂ້ານ້ອຍໄດ້ຮັກສາ ທາງຂອງພຣະຢາເວໄວ້ ແລະບໍ່ຫັນຈາກພຣະເຈົ້າຂອງຂ້ານ້ອຍ ໄປຢ່າງຊົ່ວຮ້າຍ.
22ເພາະຄຳຕັດສິນອັນຊອບທັມທັງສິ້ນຂອງພຣະອົງໄດ້ຢູ່ຕໍ່ຫນ້າຂ້ານ້ອຍ; ສ່ວນກົດເກນຂອງພຣະອົງ, ຂ້ານ້ອຍຈະບໍ່ຫັນຫນີໄປຈາກຂໍ້ເຫລົ່ານັ້ນ
ເລີຍ. 23ຂ້ານ້ອຍເປັນຜູ້ບໍ່ມີຄວາມຜິດຕໍ່ຫນ້າພຣະອົງ, ແລະຂ້ານ້ອຍໄດ້ຮັກສາຕົວເອງໃຫ້ໄກຈາກຄວາມບາບ. 24ເພາະສະນັ້ນພຣະຢາເວ ໄດ້ຊົງ
ຊ່ວຍໃຫ້ຂ້ານ້ອຍໃຫ້ກັບຄືນເພາະຄວາມຊອບທັມຂອງຂ້ານ້ອຍ, ເພາະມືຂອງຂ້ານ້ອຍສະອາດ ໃນສາຍຕາຂອງພຣະອົງ.
25ສຳຫລັບຜູ້ທີ່ຊື່ສັດ, ພຣະອົງຊົງສຳແດງພຣະອົງຊົງຊື່ສັດ; ສຳລັບຜູ້ທີ່ບໍ່ມີທີ່ຕິ, ພຣະອົງຊົງສຳແດງພຣະອົງເອງວ່າ ຊົງບໍ່ມີທີ່ຕິ. 26ວ່າຊົງບໍຣິສຸດ;
ແຕ່ພຣະອົງຊົງສະຫລາດຮູ້ທັນຕໍ່ຜູ້ທີ່ຫລອກລວງ.
27ເພາະພຣະອົງຊົງຊ່ວຍບັນດາຄົນທີ່ທຸກໃຈ, ແຕ່ພຣະອົງຊົງດຶງບັນດາຄົນທີ່ໂອ້ອວດ, ຕາທີ່ຈອງຫອງໃຫ້ຕ່ຳລົງມາ! 28ເພາະພຣະອົງປຣະທານແສງ
ສະຫວ່າງ ແກ່ຕະກຽງຂອງຂ້ານ້ອຍ; ພຣະຢາເວພຣະເຈົ້າຂອງຂ້ານ້ອຍຊົງເຮັດໃຫ້ຄວາມມືດ ຂອງຂ້ານ້ອຍສະຫວ່າງຂຶ້ນ. 29ເພາະໂດຍພຣະອົງ
ຂ້ານ້ອຍຈຶ່ງສາມາດແລ່ນຂ້ວາມສິ່ງກີດຂວາງໄດ້; ໂດຍພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍຈຶ່ງສາມາດໂດດຂ້ວາມກຳແພງໄດ້.
30ສຳລັບພຣະເຈົ້າແລ້ວ: ທາງຂອງພຣະອົງນັ້ນສົມບູນ. ຖ້ອຍຄຳຂອງພຣະຢາເວນັ້ນບໍຣິສຸດ! ພຣະອົງຊົງເປັນໂລ້ໃຫ້ແກ່ທຸກຄົນທີ່ລີ້ພັຍໃນພຣະອົງ.
31ເພາະໃຜຈະເປັນພຣະເຈົ້າໄດ້ ນອກຈາກພຣະຢາເວ? ໃຜຈະເປັນພຣະສີລາ ໄດ້ນອກຈາກພຣະເຈົ້າຂອງເຮົາ? 32ເປັນເພາະພຣະເຈົ້າຜູ້ຊົງຄາດ
ກຳລັງໃຫ້ແກ່ຂ້ານ້ອຍ ເຫມືອນດັ່ງຄາດສາຍແອວຜູ້ຊົງວາງຄົນ, ບໍ່ມີທີ່ຕິເທິງເສັ້ນທາງຂອງພຣະອົງ.
33ພຣະອົງຊົງເຮັດໃຫ້ຕີນຂອງຂ້ານ້ອຍໄວດັ່ງກວາງ ແລະວາງຂ້ານ້ອຍໄວ້ເທິງທີ່ສູງ! 34ພຣະອົງຊົງຝຶກຝົນໃຫ້ມືຂອງຂ້ານ້ອຍເຮັດສົງຄາມ ແລະໃຫ້
ແຂນຂອງຂ້ານ້ອຍກົ່ງທະນູທອງສຳລິດໄດ້.
35ພຣະອົງໄດ້ປຣະທານ ໂລ້ແຫ່ງຄວາມພົ້ນຂອງພຣະອົງ. ແກ່ຂ້ານ້ອຍມືຂວາຂອງພຣະອົງໄດ້ຊົງຄ້ຳຊູຂ້ານ້ອຍໄວ້, ແລະຄວາມພໍໃຈຂອງພຣະອົງ
ໄດ້ເຮັດໃຫ້ຂ້ານ້ອຍຍິ່ງໃຫຍ່ຂຶ້ນ. 36ພຣະອົງໄດ້ຊົງວາງຕີນຂອງຂ້ານ້ອຍໄວ້ເທິງທີ່ກວ້າງ ເພື່ອຕີນຂອງຂ້ານ້ອຍຈະບໍ່ພະລາດລົ້ມຈັກເທື່ອ.
37ຂ້ານ້ອຍໄລ່ຕາມສັດຕຣູທັງຫລາຍຂອງຂ້ານ້ອຍ ແລະຈັບພວກເຂົາໄວ້ໄດ້; ຂ້ານ້ອຍບໍ່ໄດ້ຫັນກັບຈົນກວ່າພວກເຂົາຖືກທຳລາຍ. 38ຂ້ານ້ອຍໄດ້ຕີ
ພວກເຂົາໃຫ້ແຫລກຈົນພວກເຂົາບໍ່ສາມາດລຸກຂຶ້ນໄດ້;ພວກເຂົາໄດ້ລົ້ມລົງໃຕ້ຕີນຂອງຂ້ານ້ອຍ. 39ເພາະພຣະອົງຊົງໃຫ້ກຳລັງແກ່ຂ້ານ້ອຍຄືຄາດ
ສາຍແອວສຳລັບສົງຄາມ; ພຣະອົງຊົງໃຫ້ບັນດາຄົນທີ່ລຸກຂຶ້ນຕໍ່ສູ້ຂ້ານ້ອຍ ຂາບລົງຢູ່ຕໍ່ຫນ້າຂ້ານ້ອຍ.
40ພຣະອົງຊົງໃຫ້ສັດຕຣູຂອງຂ້ານ້ອຍ ຫັນຫລັງຫນີຈາກຂ້ານ້ອຍ; ຂ້ານ້ອຍໄດ້ທຳລາຍລ້າງບັນດາຄົນທີ່ກຽດຊັງຂ້ານ້ອຍ. 41ພວກເຂົາໄດ້ຮ້ອງຫາ
ຄວາມຊ່ວຍເຫລືອ, ແຕ່ບໍ່ມີໃຜຊ່ວຍພວກເຂົາໄດ້ ພວກເຂົາໄດ້ຮ້ອງພຣະຢາເວ, ແຕ່ພຣະອົງບໍ່ຊົງຕອບພວກເຂົາ. 42ຂ້ານ້ອຍທຸບພວກເຂົາໃຫ້
ແຫລກລະອຽດ ຄືຝຸ່ນທີ່ຖືກລົມພັດ; ຂ້ານ້ອຍໂຍນພວກເຂົາຖິ້ມຄືຂີ້ຕົມຕາມຫົນທາງ.
43ພຣະອົງໄດ້ຊົງຊ່ອຍເຫລືອຂ້ານ້ອຍ. ຈາກການຕໍ່ສູ້ຂອງປະຊາຊົນ. ທີ່ຂ້ານ້ອຍບໍ່ເຄີຍຮູ້ຈັກ ໄດ້ມາຮັບໃຊ້ຂ້ານ້ອຍ. 44ທັນທີເມື່ອພວກເຂົາໄດ້ຍິນ
ສຽງຂ້ານ້ອຍ, ພວກເຂົາກໍໄດ້ເຮັດຕາມຂ້ານ້ອຍ; ພວກຄົນຕ່າງດ້າວກໍຖືກບັງຄັບໃຫ້ກົ້ມລົງຕໍ່ຂ້ານ້ອຍ. 45ພວກຄົນຕ່າງດ້າວຕ່າງຕົວສັ່ນ ອອກມາ
ຈາກປ້ອມຂອງພວກເຂົາ.

 generated on Tue Jun 17 19:01:42 2025

46 ພຣະຢາເວຊົງມີຊີວິດຢູ່. ຂໍໃຫ້ພຣະສີລາຂອງຂ້ານ້ອຍເປັນທີ່ສັນຣະເສີນ ຂໍພຣະເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍເປັນທີ່ຍົກຍ້ອງ. 47 ພຣະອົງຊົງ
ເປັນພຣະເຈົ້າຜູ້ຊົງແກ້ແຄ້ນ,ໃຫ້ແກ່ຂ້ານ້ອຍຜູ້ຊົງປາບຊົນຊາດຕ່າງໆ ໃຫ້ຍອມຈຳນົນຕໍ່ຂ້ານ້ອຍ.
48 ຂ້ານ້ອຍເປັນອິສຣະ ຈາກສັດຕຣູຂອງຂ້ານ້ອຍ! ແທ້ຈິງແລ້ວພຣະອົງ ໄດ້ຊົງຍົກຂ້ານ້ອຍໄວ້ເຫນືອ ຜູ້ທີ່ລຸກຂຶ້ນຕໍ່ຕ້ານຂ້ານ້ອຍ! ພຣະອົງໄດ້ຊົງ
ຊ່ວຍເຫລືອຂ້ານ້ອຍ ຈາກພວກຄົນໂຫດຮ້າຍ. 49 ເພາະສະນັ້ນຂ້ານ້ອຍຈະຖວາຍຂອບພຣະຄຸນແດ່ພຣະອົງ, ຂ້າແດ່ພຣະຢາເວ, ຂ້ານ້ອຍຈະຮ້ອງ
ເພງສັນຣະເສີນພຣະນາມຊື່ຂອງພຣະອົງ; ໃນທ່າມກາງບັນດາປະຊາຊາດ!
50 ພຣະເຈົ້າປຣະທານຊັຍຊະນະອັນຍິ່ງໃຫຍ່ແກ່ກະສັດ, ຂອງພຣະອົງແລະຊົງສຳແດງຄວາມຮັກຫມັ້ນຄົງ ແຫ່ງຄຳສັນຍາຂອງພຣະອົງໃຫ້ແກ່ ຜູ້
ໄດ້ຮັບການອວຍພອນໄວ້, ຄືແກ່ດາວິດແລະເຊື້ອສາຍຂອງທ່ານເປັນນິຣັນດອນ.


generated on Tue Jun 17 19:01:42 2025

19 ເຖິງຄະນະນັກຮ້ອງ. ບົດເພງສັນຣະເສີນຂອງດາວິດ. [1]ແລະບັນດາພື້ນຟ້າເຮັດໃຫ້ເຫັນຊັດແຈ້ງສິ່ງທີ່ໄດ້ຊົງເຮັດນັ້ນ! [2]ມື້ແລ້ວມື້ອີກຖ້ອຍຄຳກໍ
ຖືກເທອອກມາ; ຄືນແລ້ວຄືນອີກຄວາມຮູ້ກໍປາກົດແຈ້ງອອກມາ. [3]ຖ້າບໍ່ມີຄຳເວົ້າຫລືການເວົ້າຖ້ອຍຄຳອອກມາ; ກໍບໍ່ມີໃຜໄດ້ຍິນສຽງເຫລົ່ານັ້
ນ.

[4]ແຕ່ຖ້ອຍຄຳເຫລົ່ານັ້ນ ໄດ້ອອກໄປທົ່ວແຜ່ນດິນໂລກ, ແລະຄຳເວົ້າເຫລົ່ານັ້ນ ໄດ້ໄປເຖິງສຸດປາຍແຜ່ນດິນໂລກ. ພຣະອົງໄດ້ຊົງຕັ້ງເຕັນໄວ້ໃຫ້ດວງ
ຕາເວັນໃນທ່າມກາງຖ້ອຍຄຳເຫລົ່ານັ້ນ. [5]ດວງຕາເວັນເປັນຄືເຈົ້າບ່າວທີ່ກຳລັງອອກມາຈາກ ຫ້ອງໂຖງຂອງເຂົາ ແລະເປັນຄືຄົນແຂງແຮງທີ່ປິຕິຍິນ
ດີ ເມື່ອເຂົາແລ່ນ. [6]ດວງຕາເວັນຂຶ້ນຈາກຟາກຟ້າຫນຶ່ງ ແລະຂ້ວາມທ້ອງຟ້າໄປຍັງອີກຟາກຟ້າຫນຶ່ງ; ບໍ່ມີຫຍັງທີ່ຈະລອດພົ້ນຄວາມຮ້ອນຂອງມັນ
ໄດ້.
[7]ກົດບັນຍັດຂອງພຣະຢາເວ, ນັ້ນດີພ້ອມແລະຟື້ນຟູຈິດໃຈ; ຂໍ້ຄຳສັ່ງຂອງພຣະຢາເວນັ້ນເຊື່ອຖືໄດ້, ເຮັດໃຫ້ຄົນຮູ້ນ້ອຍມີປັນຍາ. [8]ຄຳສັ່ງສອນຂອງ
ພຣະຢາເວນັ້ນຖືກຕ້ອງ, ເຮັດໃຫ້ໃຈປິຕິຍິນດີ; ປັນຍາຂອງພຣະຢາເວນັ້ນບໍຣິສຸດ, ເຮັດໃຫ້ດວງຕາກະຈ່າງແຈ້ງ.
[9]ຄວາມຢຳເກງພຣະຢາເວ, ນັ້ນບໍຣິສຸດແລະດຳຣົງຢູ່ຕະຫລອດໄປເປັນນິດ; ກົດເກນອັນຊອບທັມຂອງພຣະຢາເວນັ້ນ ເປັນຈິງແລະຖືກຕ້ອງທັງ
ຫມົດ! [10]ມີຄ່າຫລາຍຍິ່ງກວ່າທອງຄຳ, ຫວານຍິ່ງກວ່ານ້ຳເຜິ້ງ ແລະນ້ຳເຜິ້ງທີ່ຍ້ອຍລົງມາຈາກຮັງ.
[11]ແມ່ນແລ້ວ, ຜູ້ຮັບໃຊ້ຂອງພຣະອົງ ໄດ້ຮັບຄຳຕັກເຕືອນຈາກຖ້ອຍຄຳເຫລົ່ານີ້; ການເຊື່ອຟັງເຮັດຕາມຖ້ອຍຄຳເຫລົ່ານີ້ກໍມີບຳເຫນັດລາງວັນທີ່ຍິ່ງ
ໃຫຍ່. [12]ໃຜແດ່ສາມາດເບິ່ງຄວາມຜິດພາດ ຂອງຕົນເອງໄດ້ທັງຫມົດ? ຂໍຊົງຊຳຣະຂ້ານ້ອຍຈາກຄວາມຜິດບາບທີ່ແອບລີ້ຢູ່.
[13]ຂໍຊົງປົກປ້ອງຜູ້ຮັບໃຊ້ຂອງພຣະອົງ ຈາກບາບແຫ່ງການຍິ່ງຈອງຫອງ; ຂໍຢ່າໃຫ້ມັນຄອບຄອງເຫນືອຂ້ານ້ອຍ. ແລ້ວຂ້ານ້ອຍຈຶ່ງຈະດີພ້ອມ,
ແລະຂ້ານ້ອຍຈະບໍ່ມີຄວາມຜິດອັນເນື່ອງມາຈາກ ການຫລອກລວງ ຫລວງຫລາຍ. [14]ຂໍໃຫ້ບັນດາຖ້ອຍຄຳທີ່ອອກຈາກປາກຂອງຂ້ານ້ອຍ ແລະ
ຄວາມຄິດທັງຫລາຍໃນໃຈຂອງຂ້ານ້ອຍ, ຂໍເປັນທີ່ພໍໃຈຮັບໃນສາຍຕາຂອງພຣະຢາເວ, ຜູ້ເປັນສີລາແລະເປັນຜູ້ຊົງໄຖ່ຂ້ານ້ອຍເຖີ້ນ.

 generated on Tue Jun 17 19:01:42 2025

20 ເຖິງບັນດາຄະນະນັກຮ້ອງ. ບົດເພງຂອງດາວິດ.[1]ຂໍພຣະຢາເວຊົງຊ່ອຍທ່ານໃນວັນຍາກລຳບາກ; ຂໍພຣະນາມຊື່ພຣະເຈົ້າຂອງຢາໂຄບຊົງ
ຄຸ້ມຄອງທ່ານ[2]ແລະຊົງສົ່ງຄວາມຊ່ວຍເຫລືອຈາກສະຖານທີ່ບໍຣິສຸດເພື່ອຄ້ຳຊູທ່ານຈາກຊີໂອນ.

[3]ຂໍພຣະອົງຊົງຣະນຶກເຖິງເຄື່ອງບູຊາທັງຫມົດຂອງທ່ານ ແລະຂໍຊົງພໍໃຈກັບເຄື່ອງເຜົາບູຊາຂອງທ່ານດ້ວຍເຖີດ. ເສລາ[4]ຂໍພຣະອົງຊົງປະທານຕາມ
ໃຈປຣາຖນາຂອງທ່ານ ແລະເຮັດໃຫ້ແຜນການທັງປວງຂອງທ່ານສຳເລັດ.
[5]ແລ້ວເຮົາຈະຊື່ນຊົມຍິນດີ ໃນຊັຍຊະນະຂອງທ່ານ, ແລະໃນພຣະນາມຊື່ແຫ່ງພຣະເຈົ້າຂອງເຮົາ, ແລະຈະຍົກທຸງຂຶ້ນ. ຂໍພຣະຢາເວຊົງປຣະ
ທານ ໃຫ້ຕາມຄຳພາວັນນາອະທິຖານຂອງທ່ານ.[6]ບັດນີ້ຂ້ານ້ອຍຮູ້ວ່າພຣະຢາເວຈະຊົງຊ່ວຍກູ້ຜູ້ທີ່ໄດ້ຮັບການຊົງອວຍພອນຂອງພຣະອົງ; ພຣະ
ອົງຈະຊົງຕອບເຂົາຈາກສະຫວັນອັນບໍຣິສຸດຂອງພຣະອົງ ພ້ອມດ້ວຍພຣະກຳລັງແຫ່ງມືຂວາຂອງພຣະອົງທີ່ສາມາດຊ່ວຍກູ້ເຂົາໄດ້.
[7]ບາງຄົນກໍວາງໃຈໃນບັນດາຣົດຮົບ ແລະຄົນອື່ນໆ ກໍວາງໃຈບັນດາມ້າຮົບ, ແຕ່ເຮົາຮ້ອງຫາພຣະຢາເວພຣະເຈົ້າຂອງເຮົາ.[8]ພວກເຂົາຈະຖືກເຮັດ
ໃຫ້ຕົກຕໍ່າແລະລົ້ມລົງ, ແຕ່ເຮົາຈະລຸກຂຶ້ນແລະຢືນຂຶ້ນຊື່ຕຣົງ!
[9]ຂ້າແດ່ພຣະຢາເວ, ຂໍຊົງຊ່ວຍເຫລືອພະຣາຊາ; ຂໍຊົງຊ່ວຍເຮົາເມື່ອເຮົາຮ້ອງທູນດ້ວຍເຖີດ.

 generated on Tue Jun 17 19:01:42 2025

21 [1]ເຖິງຄະນະນັກຮ້ອງ. ບົດເພງຂອງດາວິດ. ຂ້າແດ່ພຣະຢາເວ ພະຣາຊາຊື່ນຊົມຍິນດີໃນພະກຳລັງຂອງພຣະອົງ, ທ່ານຈະຍິນດີຫລາຍປານ
ໃດໃນຄວາມພົ້ນທີ່ພຣະອົງປຣະທານໃຫ້! [2]ພຣະອົງໄດ້ປຣະທານຕາມໃຈປຣາຖນາຂອງທ່ານ ແລະບໍ່ໄດ້ປະຕິເສດສິ່ງທີ່ປາກທ່ານທູນຂໍ.
ເສລາ

[3]ພຣະອົງຊົງນຳການອວຍພອນອັນຮັ່ງມີມາ; ພຣະອົງຊົງສວມມົງກຸດທອງຄຳບໍຣິສຸດເທິງຫົວຂອງທ່ານ. [4]ທ່ານໄດ້ທູນຂໍຊີວິດຕໍ່ພຣະອົງ; ພຣະອົງກໍ
ປະທານຊີວິດນັ້ນໃຫ້ແກ່ທ່ານ; ພຣະອົງຊົງໃຫ້ທ່ານມີຊີວິດຍືນຍາວຕະຫລອດໄປ.
[5]ກຽດຕິຍົດຂອງທ່ານຍິ່ງໃຫຍ່ກໍເປັນເພາະຊັຍຊະນະຂອງພຣະອົງ; ພຣະອົງໄດ້ປຣະທານຄວາມສະງ່າງາມແລະບາຣະມີໃຫ້ແກ່ທ່ານ. [6]ເພາະພ
ຣະອົງປຣະທານພຣະພອນນິຣັນດອນໃຫ້ແກ່ທ່ານ; ພຣະອົງຊົງເຮັດໃຫ້ທ່ານຍິນດີດ້ວຍຄວາມຊື່ນຊົມຍິນດີຢູ່ຕໍ່ຫນ້າຂອງພຣະອົງ.
[7]ເພາະພະຣາຊາໄວ້ວາງໃຈໃນພຣະຢາເວ; ໂດຍຄວາມຊື່ສັດແຫ່ງພັນທະສັນຍາຂອງຜູ້ສູງສຸດ ທ່ານຈະບໍ່ຫວັ່ນໄຫວເລີຍ. [8]ພຣະຫັດຂອງພຣະອົງ
ຈະໄລ່ຕາມສັດຕຣູທັງປວງຂອງພຣະອົງ; ພຣະຫັດຂວາຂອງພຣະອົງຈະໄລ່ຕາມບັນດາຜູ້ທີ່ກຽດຊັງພຣະອົງ.
[9]ເມື່ອຄວາມໂກດຮ້າຍຂອງພຣະອົງມາເຖິງ, ພຣະອົງຈະເຜົາຜານພວກເຂົາ ຄືດັ່ງເຕົາຫລອມທີ່ມີໄຟລຸກຢູ່. ພຣະຢາເວຈະເຜົາຜານພວກເຂົາໃນ
ຄວາມໂກດຮ້າຍຂອງພຣະອົງ, ແລະໄຟນັ້ນຈະກືນກິນພວກເຂົາເສຍ. [10]ພຣະອົງຈະຊົງທຳລາຍ ລູກຫລານຂອງພວກເຂົາໃຫ້ຫມົດໄປ ຈາກແຜ່ນ
ດິນໂລກ ແລະທຳລາຍເຊື້ອສາຍຂອງພວກເຂົາ ໄປຈາກທ່າມກາງເຊື້ອສາຍຂອງມະນຸດ.
[11]ເພາະພວກເຂົາໄດ້ປອງຮ້າຍຕໍ່ພຣະອົງ; ພວກເຂົາໄດ້ວາງແຜນຊົ່ວຊຶ່ງພວກເຂົາຈະເຮັດບໍ່ສຳເລັດ! [12]ເພາະພຣະອົງຈະໃຫ້ພວກເຂົາຫັນຫນີກັບ
ໄປ; ພຣະເຈົ້າຈະຊົງເລັງທະນູໄປຕໍ່ຫນ້າພວກເຂົາ.
[13]ຂໍຊົງເປັນທີ່ຍົກຍ້ອງ, ຂ້າແດ່ພຣະຢາເວ, ໃນພຣະກຳລັງຂອງພຣະອົງ; ຂ້ານ້ອຍທັງຫລາຍຈະຮ້ອງເພງແລະສັນຣະເສີນພຣະອານຸພາບຂອງພ
ຣະອົງ.


generated on Tue Jun 17 19:01:42 2025

22 ເຖິງຄະນະນັກຮ້ອງ; ສົ່ງເຖິງ " ຈັ່ງຫວະຂອງກວາງ." ບົດເພງຂອງດາວິດ.

[1]ພຣະເຈົ້າຂອງຂ້ານ້ອຍ, ພຣະເຈົ້າຂອງຂ້ານ້ອຍ, ເປັນຫຍັງພຣະອົງຊົງປະຖິ້ມຂ້ານ້ອຍເສຍ? ເປັນຫຍັງພຣະອົງຊົງເມີນເສີຍທີ່ຈະຊ່ວຍຂ້ານ້ອຍ
ແລະຊົງເມີນເສີຍ ຕໍ່ຖ້ອຍຄຳແຫ່ງຄວາມເຈັບປວດ ຂອງຂ້ານ້ອຍ?[2]ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ, ຂ້ານ້ອຍຮ້ອງອອກມາໃນເວລາກາງເວັນ, ແຕ່
ພຣະອົງບໍ່ຊົງຕອບ, ແລະໃນຍາມຄໍ່າຄືນຂ້ານ້ອຍກໍບໍ່ງຽບເສີຍ!

[3]ເຖິງຢ່າງໃດພຣະອົງກໍຍັງຊົງບໍຣິສຸດ; ພຣະອົງນັ່ງທີ່ເທິງບັນລັງຂອງພຣະອົງທ່າມກາງບັນດາຄຳສັນຣະເສີນຂອງອິສະຣາເອນ.[4]ບັນພະບຸຣຸດຂອງ
ຂ້ານ້ອຍ ທັງຫລາຍໄດ້ໄວ້ວາງໃຈພຣະອົງ; ພວກເຂົາໄດ້ໄວ້ວາງໃຈໃນພຣະອົງ, ແລະພຣະອົງໄດ້ຊົງຊ່ວຍເຫລືອພວກເຂົາ.[5]ພວກເຂົາໄດ້ຮ້ອງຫາ
ພຣະອົງແລະພວກເຂົາໄດ້ຮັບການຊ່ວຍເຫລືອ. ພວກເຂົາໄດ້ໄວ້ວາງໃຈໃນພຣະອົງແລະບໍ່ຜິດຫວັງ.
[6]ແຕ່ຂ້ານ້ອຍເປັນພຽງຫນອນໂຕຫນຶ່ງບໍ່ແມ່ນມະນຸດ, ຜູ້ຄົນກໍພາກັນສຽດສີແລະປະຊາຊົນກໍດູຫມິ່ນ.[7]ທຸກຄົນທີ່ເຫັນຂ້ານ້ອຍກໍຫຍໍ້ຫຍັນຂ້າ
ນ້ອຍ; ພວກເຂົາເຢາະເຍີ້ຍຂ້ານ້ອຍ ພວກເຂົາແກ່ງຫົວໃສ່ຂ້ານ້ອຍ.[8]ພວກເຂົາເວົ້າວ່າ, "ເຂົາໄວ້ວາງໃຈໃນພຣະຢາເວ; ໃຫ້ພຣະຢາເວຊ່ວຍເຂົາ
ເຖີດ. ໃຫ້ພຣະອົງຊ່ວຍເຫລືອເຂົາເຖີດ, ເພາະເຂົາຊື່ນຊົມຍິນດີໃນພຣະອົງ."
[9]ເພາະພຣະອົງໄດ້ຊົງນຳຂ້ານ້ອຍ ອອກມາຈາກທ້ອງແມ່; ພຣະອົງໄດ້ຊົງເຮັດໃຫ້ຂ້ານ້ອຍໄວ້ວາງໃຈໃນພຣະອົງ ເມື່ອຂ້ານ້ອຍຍັງຢູ່ທີ່ເອິກຂອງ
ແມ່.[10]ຂ້ານ້ອຍຖືກຖິ້ມໄວ້ກັບພຣະອົງຕັ້ງແຕ່ອອກຈາກທ້ອງ; ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ ຕັ້ງແຕ່ຂ້ານ້ອຍຢູ່ໃນທ້ອງຂອງແມ່ຂອງຂ້າ
ນ້ອຍ!
[11]ຂໍຢ່າຊົງຫ່າງຈາກຂ້ານ້ອຍ, ເພາະຄວາມລຳບາກຢູ່ໃກ້; ແລະບໍ່ມີໃຜທີ່ຈະຊ່ວຍໄດ້ເລີຍ.[12]ພວກງົວໂຕຜູ້ກໍອ້ອມຮອບຂ້ານ້ອຍ; ງົວປ່າຮ້າຍທີ່ບາ
ຊານກໍອ້ອມຂ້ານ້ອຍໄວ້.[13]ພວກເຂົາອ້າປາກກວ້າງໃສ່ຂ້ານ້ອຍ ເຫມືອນສິງທີ່ຄຳລາມກຳລັງຈີກເຫຍື່ອຂອງມັນ.
[14]ຂ້ານ້ອຍກຳລັງຖືກເທອອກເຫມືອນນ້ຳ, ແລະກະດູກທັງຫມົດຂອງຂ້ານ້ອຍກໍຫລຸດອອກຈາກກັນ. ໃຈຂອງຂ້ານ້ອຍກໍລະລາຍຢູ່ພາຍໃນ; ຂ້າ
ນ້ອຍຄືຂີ້ເຜີ້ງ.[15]ກຳລັງຂອງຂ້ານ້ອຍກໍແຫ້ງໄປຄືເສດຫມໍ້ດິນ; ລີ້ນຂອງຂ້ານ້ອຍກໍຕິດຢູ່ທີ່ເພດານປາກ. ພຣະອົງໄດ້ຊົງວາງຂ້ານ້ອຍໄວ້ໃນແດນ
ແຫ່ງຄວາມຕາຍ.
[16]ເພາະພວກຫມາໄດ້ລຸມອ້ອມຂ້ານ້ອຍ; ເຫລົ່າພວກຄົນເຮັດຊົ່ວກໍອ້ອມຂ້ານ້ອຍ; ພວກເຂົາໄດ້ແທງມືແທງຕີນຂ້ານ້ອຍ.[17]ຂ້ານ້ອຍສາມາດນັບກະ
ດູກທັງຫມົດຂອງຂ້ານ້ອຍໄດ້. ພວກເຂົາຈ້ອງເບິ່ງທີ່ຂ້ານ້ອຍ.
[18]ພວກເຂົາໄດ້ແບ່ງເສື້ອຄຸມ. ຂອງຂ້ານ້ອຍໃນທ່າມກາງພວກເຂົາ ພວກເຂົາໄດ້ຈັບສະຫລາກເສື້ອຜ້າຂອງຂ້ານ້ອຍ.[19]ຂໍຢ່າຊົງຫ່າງໄກ, ຂ້າແດ່
ພຣະຢາເວ; ຂໍຊົງໂຜດມາຊ່ວຍຂ້ານ້ອຍດ້ວຍເຖີດ,ພຣະຜູ້ຊົງເປັນກຳລັງຂອງຂ້ານ້ອຍ!
[20]ຂໍໂຜດຊ່ວຍຂ້ານ້ອຍໃຫ້ພົ້ນຈາກຄົມດາບ, ຂໍຊົງຊ່ວຍຊີວິດທີ່ເຫລືອຂອງຂ້ານ້ອຍຈາກແຂ້ວຂອງພວກຫມາປ່າ.[21]ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກ
ປາກສິງ; ຂໍຊົງຊ່ວຍຂ້ານ້ອຍຈາກບັນດາເຂົາຂອງພວກກະທິງປ່າ.
[22]ຂ້ານ້ອຍຈະປະກາດ ພຣະນາມຊື່ຂອງພຣະອົງໃຫ້ແກ່ພວກພີ່ນ້ອງຂອງຂ້ານ້ອຍ; ຂ້ານ້ອຍຈະສັນຣະເສີນພຣະອົງ ໃນທ່າມກາງທີ່ຊຸມນຸມ.[23]ທ່ານ
ຜູ້ທີ່ຢຳເກງພຣະຢາເວເອີຍ, ຈົ່ງສັນຣະເສີນພຣະອົງເຖີດ! ບັນດາເຊື້ອສາຍທັງຫມົດຂອງຢາໂຄບເອີຍ, ຈົ່ງຖວາຍກຽຕແດ່ພຣະອົງເຖີດ! ບັນດາ
ທ່ານທີ່ເປັນເຊື້ອສາຍຂອງອິສະຣາເອນເອີຍ, ຈົ່ງຢືນຂຶ້ນໃນຄວາມຢຳເກງພຣະອົງເຖີດ.
[24]ເພາະພຣະອົງບໍ່ຊົງດູຖູກ ຫລືລັງກຽດຕໍ່ຄວາມລຳບາກ ຂອງຄົນທີ່ທຸກຍາກ; ພຣະຢາເວບໍ່ໄດ້ເຊື່ອງຫນ້າຂອງພຣະອົງຈາກເຂົາ; ເມື່ອຄົນທີ່ທຸກ
ຍາກໄດ້ຮ້ອງຕໍ່ພຣະອົງ, ພຣະອົງກໍຊົງຟັງ.[25]ເປັນເພາະພຣະອົງຂ້ານ້ອຍ ຈຶ່ງສັນຣະເສີນພຣະອົງໃນທີ່ຊຸມນຸມໃຫຍ່; ຂ້ານ້ອຍຈະເຮັດຕາມຄຳ
ປະຕິຍານທັງຫລາຍຂອງຂ້ານ້ອຍຕໍ່ຫນ້າບັນດາຜູ້ທີ່ຢຳເກງພຣະອົງ.
[26]ຜູ້ທີ່ຖືກຂົ່ມເຫັງຈະໄດ້ກິນອີ່ມ; ບັນດາຜູ້ທີ່ສະແຫວງພຣະຢາເວ ຈະສັນຣະເສີນພຣະອົງ. ຂໍໃຫ້ໃຈຂອງທ່ານທັງຫລາຍ ມີຊີວິດຢູ່ຕະຫລອດໄປ.
[27]ບັນດາປະຊາຊົນທັງຫມົດຂອງແຜ່ນດິນໂລກຈະຣະນຶກໄດ້ແລະຫັນໄປຫາພຣະຢາເວ; ເຊື້ອສາຍທັງຫມົດຂອງບັນດາປະຊາຊົນຈະກົ້ມກາບລົງ
ຕໍ່ພຣະອົງ.
[28]ເພາະຣາຊອານາຈັກເປັນຂອງພຣະຢາເວ; ພຣະອົງຊົງຄອບຄອງເຫນືອຊົນຊາດຕ່າງໆ.[29]ບັນດາຜູ້ຮັ່ງມີທັງຫມົດຂອງແຜ່ນດິນໂລກຈະສະ
ເຫລີມສະຫລອງ ແລະຈະນະມັສະການ; ບັນດາຜູ້ທີ່ໄອ້ອວດຈອງຫອງນັ້ນ ຈະກົ້ມກາບພຣະອົງ, ຄືບັນດາຜູ້ທີ່ບໍ່ສາມາດຮັກສາຊີວິດຂອງຕົນເອງ
ໄວ້ໄດ້.
[30]ຄົນຊົ່ວອາຍຸຫນຶ່ງຈະມາຮັບໃຊ້ພຣະອົງ; ພວກເຂົາຈະບອກຊົ່ວອາຍຸຕໍ່ໄປເຖິງເລື່ອງຂອງອົງພຣະຜູ້ເປັນເຈົ້າ.[31]ພວກເຂົາຈະມາບອກເຖິງຄວາມ
ຊອບທັມຂອງພຣະອົງ; ພວກເຂົາຈະບອກປະຊາຊົນໃນຮຸ້ນຕໍ່ໄປເຖິງສິ່ງທີ່ພຣະອົງໄດ້ຊົງກະທຳໄວ້!

 generated on Tue Jun 17 19:01:42 2025

23 [1]ບົດເພງສັນຣະເສີນຂອງດາວິດ. ພຣະຢາເວຊົງເປັນຜູ້ລ້ຽງຂອງຂ້ານ້ອຍດັ່ງລ້ຽງແກະ; ຂ້ານ້ອຍຈະບໍ່ຂາດສິ່ງໃດໆ.[2]ພຣະອົງຊົງເຮັດໃຫ້ຂ້າ
ນ້ອຍນອນລົງທີ່ທົ່ງຫຍ້າຂຽວສົດ; ພຣະອົງຊົງນຳຂ້ານ້ອຍໄປແຄມນ້ຳທີ່ມິດງຽບ.

[3]ຊົງນຳຊີວິດຂອງຂ້ານ້ອຍກັບຄືນມາ; ພຣະອົງຊົງນຳຂ້ານ້ອຍໄປຕາມທາງຊອບທັມ ເພາະເຫັນແກ່ພຣະນາມຊື່ຂອງພຣະອົງ.
[4]ແມ່ນຂ້ານ້ອຍຈະຍ່າງໄປຕາມຮ່ອມເຂົາເງົາມືດມິດ, ຂ້ານ້ອຍຈະບໍ່ຢ້ານອັນຕະຣາຍໃດໆ ເພາະພຣະອົງສະຖິດກັບຂ້ານ້ອຍ; ໄມ້ຄ້ອນແລະໄມ້
ເທົ້າຂອງພຣະອົງຊົງປອບໃຈຂ້ານ້ອຍ.
[5]ພຣະອົງຊົງຈັດຕຽມໂຕະອາຫານ ໃຫ້ແກ່ຂ້ານ້ອຍຕໍ່ຫນ້າສັດຕຣູທັງຫລາຍຂອງຂ້ານ້ອຍ; ພຣະອົງໄດ້ຊົງເຈີມຫົວຂອງຂ້ານ້ອຍດ້ວຍນ້ຳມັນ;
ຖ້ວຍຂອງຂ້ານ້ອຍກໍລົ້ນຢູ່.
[6]ພຣະຄຸນຄວາມດີແລະຄວາມຊື່ສັດ ແຫ່ງພັນທະສັນຍາຈະຕິດຕາມຂ້ານ້ອຍ ໄປຕະຫລອດຊົ່ວຊີວິດຂອງຂ້ານ້ອຍ; ແລະຂ້ານ້ອຍຈະຢູ່ໃນພຣະວິ
ຫານຂອງພຣະຢາເວ ຕະຫລອດໄປເປັນນິດ!


generated on Tue Jun 17 19:01:42 2025

24 [1]ບົດເພງສັນຣະເສີນຂອງດາວິດ. ແຜ່ນດິນໂລກແລະທຸກສິ່ງມີຢູ່ໃນນັ້ນ ທັງຫມົດເປັນຂອງພຣະຢາເວ, ແລະທັງໂລກແລະບັນດາທຸກສິ່ງທີ່ອາ
ສັຍຢູ່ໃນນັ້ນ. [2]ເພາະພຣະອົງໄດ້ຊົງກໍ່ຕັ້ງແຜ່ນດິນໄວ້ເທິງມະຫາສະມຸດແລະຊົງສ້າງມັນໄວ້ເທິງແມ່ນ້ຳທັງປວງ.

[3]ຜູ້ໃດຈະຂຶ້ນໄປເທິງພູເຂົາຂອງພຣະຢາເວໄດ້? ຜູ້ໃດຈະຢືນຢູ່ໃນສະຖານທີ່ສັກສິດຂອງພຣະອົງໄດ້? [4]ຄືຜູ້ທີ່ມີມືສະອາດແລະມີໃຈບໍຣິສຸດ; ຄືຜູ້ທີ່
ບໍ່ໄດ້ຍົກຍ້ອງຄວາມຕົວະ, ແລະບໍ່ສາບານຢ່າງຫລອກລວງ.
[5]ເຂົາຈະຮັບພຣະພອນຈາກພຣະຢາເວ ແລະຮັບຄວາມຊອບທັມຈາກ ພຣະເຈົ້າແຫ່ງຄວາມພົ້ນຂອງເຂົາ. [6]ເຊັ່ນນີ້ແຫລະເປັນຍຸກຂອງຄົນທີ່ສະ
ແຫວງຫາພຣະອົງ, ຄືບັນດາຜູ້ທີ່ສະແຫວງຫາພຣະພັກພຣະເຈົ້າຂອງຢາໂຄບ. ເສລາ
[7]ຈົ່ງຍົກຫົວຂອງເຈົ້າຂຶ້ນ, ປະຕູເມືອງທັງຫລາຍເອີຍ; ບານປະຕູນິຣັນດອນເອີຍ, ຈົ່ງຍົກຂຶ້ນເພື່ອອົງກະສັດແຫ່ງພຣະສະຫງ່າຣາສີຈະໄດ້ເຂົ້າມາ!
[8]ອົງກະສັດແຫ່ງພຣະສະຫງ່າຣາສີນັ້ນຄືຜູ້ໃດ? ຄືພຣະຢາເວ, ຜູ້ຊົງເຂັ້ມແຂງແລະຊົງຣິດທານຸພາບ; ພຣະຢາເວ, ຜູ້ຊົງມີຊັຍໃນສະຫນາມຮົບ.
[9]ຈົ່ງຍົກຫົວຂອງເຈົ້າຂຶ້ນ, ປະຕູເມືອງທັງຫລາຍເອີຍ; ບານປະຕູນິຣັນດອນເອີຍ, ເພື່ອອົງກະສັດແຫ່ງພຣະສະຫງ່າຣາສີຈະໄດ້ເຂົ້າມາ! [10]ຄືພຣະ
ຢາເວຈອມໂຢທາ ພຣະອົງຊົງເປັນກະສັດຜູ້ຊົງພຣະສະຫງ່າຣາສີ. ເສລາ

 generated on Tue Jun 17 19:01:42 2025

25 1ບົດເພງສັນຣະເສີນຂອງດາວິດ. ສົ່ງເຖິງ, ຂ້າແດ່ພຣະຢາເວ, ຂ້ານ້ອຍຍົກຊີວິດຂອງຂ້ານ້ອຍຂຶ້ນຕໍ່ພຣະອົງ! 2ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ,
ຂ້ານ້ອຍວາງໃຈພຣະອົງ. ຂໍຢ່າຊົງປ່ອຍໃຫ້ຂ້ານ້ອຍອັບອາຍ; ຂໍຢ່າຊົງປ່ອຍໃຫ້ສັດຕຣູຂອງຂ້ານ້ອຍໄດ້ດີໃຈເຫນືອຂ້ານ້ອຍຢ່າງຜູ້ມີຊັຍຊະ
ນະ. 3ຂໍຢ່າໃຫ້ຜູ້ທີ່ຫວັງໃຈໃນພຣະອົງຕ້ອງຂາຍຫນ້າ ຂໍໃຫ້ບັນດາຄົນທີ່ເຮັດການທັກຫລັງໂດຍບໍ່ມີເຫດຜົນໄດ້ອັບອາຍ!

4ຂໍຊົງໃຫ້ຂ້ານ້ອຍໄດ້ຮູ້ຈັກຮູ້ທາງຂອງພຣະອົງ, ຂ້າແດ່ພຣະຢາເວ; ຂໍຊົງສອນວິທີທາງຂອງພຣະອົງໃຫ້ແກ່ຂ້ານ້ອຍ. 5ຂໍຊົງນຳຂ້ານ້ອຍໄປໃນ
ຄວາມຈິງຂອງພຣະອົງແລະຂໍຊົງສອນຂ້ານ້ອຍ, ເພາະພຣະອົງຊົງເປັນ ພຣະເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍ; ຂ້ານ້ອຍຫວັງໃຈໃນພຣະອົງມາ
ດົນນານ.
6ເອີ້ນໃຫ້ກັບໃຈ, ຂ້າແດ່ພຣະຢາເວ, ຂໍຊົງຣະນຶກເຖິງຄວາມເມດຕາແລະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ; ເພາະສິ່ງເຫລົ່ານັ້ນໄດ້ມີຢູ່
ຕະຫລອດມາ. 7ຂໍຢ່າຊົງຣະນຶກເຖິງບັນດາຄວາມບາບໃນໄວຫນຸ່ມຂອງຂ້ານ້ອຍຫລືການກະບົດຂອງຂ້ານ້ອຍ; ຂໍຊົງຣະນຶກເຖິງຂ້ານ້ອຍດ້ວຍ
ຄວາມຊື່ສັດແຫ່ງຄຳສັນຍາອັນເນື່ອງມາຈາກຄວາມດີຂອງພຣະອົງ, ຂ້າແດ່ພຣະຢາເວ!
8ພຣະຢາເວຊົງປະເສີດແລະຊອບທັມ; ເພາະສະນັ້ນພຣະອົງ ຊົງສອນທາງທີ່ເຂົາຈະປະພຶດແກ່ບັນດາຄົນບາບ. 9ພຣະອົງຊົງນຳຄົນຖ່ອມໃຈໄປໃນ
ສິ່ງທີ່ຖືກ ແລະພຣະອົງຊົງສອນໃຫ້ຮູ້ທາງຂອງພຣະອົງໃຫ້ແກ່ພວກເຂົາ.
10ຮູ້ທາງທັງຫມົດຂອງພຣະຢາເວເປັນຄວາມຮັກທີ່ຫມັ້ນຄົງແລະຄວາມຊື່ສັດຕໍ່ບັນດາຄົນທີ່ຮັກສາພັນທະສັນຍາແລະຄຳສັ່ງຂອງພຣະອົງ. 11ເພື່ອ
ເຫັນແກ່ພຣະນາມຊື່ຂອງພຣະອົງ, ຂ້າແດ່ພຣະຢາເວ, ຂໍຊົງອະພັຍບາບຂອງຂ້ານ້ອຍ, ເພາະບາບນັ້ນໃຫຍ່ຫລາຍ.
12ຜູ້ໃດແດ່ ເປັນຜູ້ທີ່ຢຳເກງພຣະຢາເວ? ອົງພຣະຜູ້ເປັນເຈົ້າຈະຊົງສອນເຂົາເຖິງເສັ້ນທາງທີ່ເຂົາຄວນຈະເລືອກ. 13ຊີວິດຂອງເຂົາດຳເນີນໄປໃນ
ຄວາມດີ; ແລະເຊື້ອສາຍຂອງເຂົາຈະໄດ້ແຜ່ນດິນເປັນເຈົ້າຂອງ.
14ມິດຕະພາບຂອງພຣະຢາເວມີໃຫ້ແກ່ບັນດາຄົນທີ່ໃຫ້ກຽດຕິຍົດແດ່ພຣະອົງ, ແລະພຣະອົງຊົງໃຫ້ພວກເຂົາຮູ້ຈັກພັນທະສັນຍາຂອງພຣະອົງ.
15ດວງຕາຂອງຂ້ານ້ອຍຈ້ອງເບິ່ງທີ່ພຣະຢາເວຢູ່ສະເຫມີ, ເພາະພຣະອົງຈະຊົງຖອນຕີນຂອງຂ້ານ້ອຍໃຫ້ຫລຸດອອກຈາກຕາຂ່າຍ. 16ຂໍຊົງຫັນມາ
ຫາຂ້ານ້ອຍແລະຊົງມີຄວາມເມດຕາຕໍ່ຂ້ານ້ອຍ; ເພາະຂ້ານ້ອຍໂດດດ່ຽວແລະທຸກໃຈ.
17ຄວາມທຸກໃນໃຈຂອງຂ້ານ້ອຍພຣະອົງກໍເພີ່ມຫລາຍຂຶ້ນ; ຂໍຊົງນຳຂ້ານ້ອຍອອກຈາກຄວາມທຸກໃຈຂອງຂ້ານ້ອຍ! 18ຂໍຊົງແນມເບິ່ງຄວາມທຸກ
ຍາກຂອງຂ້ານ້ອຍແລະຄວາມລຳບາກຂອງຂ້ານ້ອຍ; ຂໍຊົງອະພັຍຄວາມບາບທັງຫມົດຂອງຂ້ານ້ອຍ. 19ຂໍຊົງເບິ່ງພວກສັດຕຣູຂອງຂ້ານ້ອຍ, ເພາະ
ພວກເຂົາມີກັນຫລວງຫລາຍ; ພວກເຂົາກຽດຊັງຂ້ານ້ອຍຢ່າງຄຽດແຄ້ນຫລາຍ.
20ຂໍຊົງຄຸ້ມຄອງຊີວິດຂອງຂ້ານ້ອຍ ແລະຂໍຊົງຊ່ວຍເຫລືອຂ້ານ້ອຍ; ຂໍຢ່າຊົງຖິ້ມຂ້ານ້ອຍໃຫ້ຂ້ານ້ອຍຕ້ອງອັບອາຍ, ເພາະຂ້ານ້ອຍລີ້ພັຍໃນພຣະ
ອົງ! 21ຂໍຄວາມດີແລະຄວາມສັດຊື່ປົກປ້ອງຂ້ານ້ອຍໄວ້, ເພາະຂ້ານ້ອຍຫວັງໃຈໃນພຣະອົງ.
22ຂ້າແດ່ພຣະເຈົ້າ, ຂໍຊົງຊ່ວຍເຫລືອອິສະຣາເອນ, ໃຫ້ພົ້ນຈາກຄວາມຍາກລຳບາກທັງຫມົດຂອງເຂົາ!

 generated on Tue Jun 17 19:01:42 2025

26 1ບົດເພງສັນຣະເສີນຂອງດາວິດ. ຂ້າແດ່ພຣະຢາເວ, ຂໍຊົງຕັດສິນຂ້ານ້ອຍ, ເພາະຂ້ານ້ອຍໄດ້ດຳເນີນດ້ວຍຄວາມສັດຊື່ທີ່ຖືກຕ້ອງ; ຂ້ານ້ອຍ
ໄດ້ວາງໃຈໃນພຣະຢາເວໂດຍບໍ່ຫວັ່ນໄຫວ ຂ້າແດ່ພຣະຢາເວ. 2ຂໍຊົງກວດເບິ່ງຂ້ານ້ອຍ, ພຣະຢາເວ, ແລະຊົງທົດສອບຂ້ານ້ອຍ; ຂໍຊົງທົດ
ສອບຄວາມບໍຣິສຸດໃນຕົວຂອງຂ້ານ້ອຍແລະໃນໃຈຂອງຂ້ານ້ອຍ! 3ເພາະຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງຢູ່ຕໍ່ຕາຂອງຂ້ານ້ອຍ, ແລະ
ຂ້ານ້ອຍດຳເນີນໃນຄວາມຊື່ສັດຂອງພຣະອົງ.

4ຂ້ານ້ອຍບໍ່ເຂົ້າສ່ວນກັບພວກຄົນຫລອກລວງ, ຂ້ານ້ອຍບໍ່ຫຍຸ້ງກ່ຽວກັບພວກຄົນທີ່ບໍ່ຈິງໃຈ. 5ຂ້ານ້ອຍກຽດຊັງທີ່ຊຸມນຸມຂອງພວກຄົນເຮັດຊົ່ວ,
ແລະຂ້ານ້ອຍຫລີກຫນີຈາກພວກຄົນຊົ່ວຮ້າຍ.
6ຂ້ານ້ອຍລ້າງມືຂອງຂ້ານ້ອຍເພື່ອສະແດງຄວາມບໍຣິສຸດ, ຂ້ານ້ອຍຍ່າງຮອບແທ່ນບູຊາຂອງພຣະອົງ, ຂ້າແດ່ພຣະຢາເວ, 7ເພື່ອເປັ່ງສຽງຮ້ອງເພງ
ສັນຣະເສີນແລະເລົ່າເຖິງການອັສະຈັນທັງຫມົດຂອງພຣະອົງ. 8ຂ້າແດ່ພຣະຢາເວ, ຂ້ານ້ອຍຮັກວິຫານຂອງພຣະອົງ ຊຶ່ງເປັນບ່ອນສະຖິດຂອງພ
ຣະອົງ, ທີ່ຊຶ່ງສະຫງ່າຣາສີຂອງພຣະອົງປຣະທັບຢູ່!
9ຂໍຢ່າຊົງທຳລາຍຂ້ານ້ອຍໄປພ້ອມກັບພວກຄົນບາບ, ຫລືທຳລາຍຊີວິດຂ້ານ້ອຍໄປພ້ອມກັບພວກຄົນຫິວເລືອດ, 10ຊຶ່ງເປັນພວກທີ່ມີແຜນຊົ່ວຢູ່ມື
ຂອງເຂົາ, ແລະມືຂວາຂອງເຂົາກໍເຕັມໄປດ້ວຍສິນບົນ,
11ແຕ່ສຳຫລັບຂ້ານ້ອຍ, ຂ້ານ້ອຍຈະດຳເນີນໃນຄວາມສັດຊື່ທີ່ຖືກຕ້ອງ; ຂໍຊົງໄຖ່ຂ້ານ້ອຍແລະຊົງເມດຕາຕໍ່ຂ້ານ້ອຍ. 12ຕີນຂອງຂ້ານ້ອຍຢືນຕິດພື້ນ
ດິນ; ຂ້ານ້ອຍຈະຖວາຍຄຳສັນຣະເສີນແດ່ພຣະຢາເວໃນທ່າມກາງທີ່ຊຸມນຸມ!

27 ບົດເພງສັນລະເສີນຂອງດາວິດ.1ພຣະຢາເວຊົງເປັນຄວາມສະຫວ່າງແລະຄວາມພົ້ນຂອງຂ້ານ້ອຍ; ຂ້ານ້ອຍຈະຢ້ານຜູ້ໃດແດ່? ພຣະຢາເວ
ຊົງເປັນທີ່ລີ້ພັຍແຫ່ງຊີວິດຂອງຂ້ານ້ອຍ; ຂ້ານ້ອຍຈະເກງກົວຜູ້ໃດແດ່?

2ເມື່ອພວກຄົນເຮັດຊົ່ວເຂົ້າມາໃກ້ເພື່ອກັດກິນເນື້ອຂ້ານ້ອຍ, ພວກສັດຕຣູຂອງຂ້ານ້ອຍກໍໄດ້ສະດຸດແລະລົ້ມລົງ.3ແມ່ນກອງທັບຕັ້ງຄ້າຍຕໍ່ສູ້ຂ້າ
ນ້ອຍ, ໃຈຂອງຂ້ານ້ອຍກໍບໍ່ຢ້ານ; ແມ່ນສົງຄາມລຸກຂຶ້ນຕໍ່ສູ້ຂ້ານ້ອຍ, ເຖິງແມ່ນດັ່ງນັ້ນກໍຕາມຂ້ານ້ອຍຈະຍັງມີຄວາມໝັ້ນໃຈ.
4ສິ່ງຫນຶ່ງທີ່ຂ້ານ້ອຍໄດ້ທູນຂໍຈາກພຣະຢາເວ, ແລະຂ້ານ້ອຍຈະສະແຫວງຫາສິ່ງນັ້ນ: ນັ້ນຄືທີ່ຂ້ານ້ອຍຈະໄດ້ຢູ່ໃນວິຫານຂອງພຣະຢາເວຕະ
ຫລອດວັນຄືນແຫ່ງຊີວິດຂອງຂ້ານ້ອຍ, ເພື່ອຈະໄດ້ເບິ່ງຄວາມງາມຂອງພຣະຢາເວແລະຈະເຝົ້າພາວັນນາໃນພຣະວິຫານຂອງພຣະອົງ.
5ເພາະໃນວັນແຫ່ງຄວາມຍາກລຳບາກ; ພຣະອົງຈະເຊື່ອງຂ້ານ້ອຍໄວ້ໃນທີ່ກຳບັງຂອງພຣະອົງ. ພຣະອົງຈະເກັບຂ້ານ້ອຍໄວ້ໃນພຣະວິຫານຂອງ
ພຣະອົງ ພຣະອົງຈະຊົງຕັ້ງຂ້ານ້ອຍໄວ້ສູງເທິງໂງ່ນຫີນ!6ແລ້ວຫົວຂອງຂ້ານ້ອຍຈະເຊີດຂຶ້ນເຫນືອພວກສັດຕຣູທີ່ຢູ່ລ້ອມຮອບຂ້ານ້ອຍ, ແລະຂ້າ
ນ້ອຍຈະຖວາຍເຄື່ອງບູຊາແຫ່ງຄວາມຊື່ນຊົມຍິນດີໃນພຣະວິຫານຂອງພຣະອົງ! ຂ້ານ້ອຍຮ້ອງເພງແລະຖວາຍບົດເພງແດ່ພຣະຢາເວ!
7ຈົ່ງຟັງ, ຂ້າແດ່ພຣະຢາເວ, ຂໍຊົງຟັງສຽງຂອງຂ້ານ້ອຍເມື່ອຂ້ານ້ອຍຮ້ອງທູນ, ແລະຂໍຊົງກະຣຸນາຕໍ່ຂ້ານ້ອຍ, ແລະຂໍຊົງຕອບຂ້ານ້ອຍ!8ໃຈຂອງ
ຂ້ານ້ອຍເວົ້າເຖິງພຣະອົງວ່າ, "ຈົ່ງສະແຫວງຫາພຣະພັກຂອງພຣະອົງ!" ຂ້ານ້ອຍສະແຫວງຫາພຣະພັກຂອງພຣະອົງ, ຂ້າແດ່ພຣະຢາເວ!
9ຂໍຢ່າຂັບໄລ່ຜູ້ຮັບໃຊ້ຂອງພຣະອົງ; ໄປດ້ວຍຄວາມໂກດຮ້າຍ; ພຣະອົງຊົງເປັນຜູ້ຊ່ວຍຂ້ານ້ອຍ; ຂໍຢ່າຊົງລືມຂ້ານ້ອຍຫລືຖິ້ມຂ້ານ້ອຍ, ຂ້າແດ່ພ
ຣະເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍ!10ແມ່ນພໍ່ແມ່ຂອງຂ້ານ້ອຍຖິ້ມຂ້ານ້ອຍ, ແຕ່ພຣະຢາເວຊົງຮັບຂ້ານ້ອຍໄວ້.
11ຂໍຊົງສອນທາງຂອງພຣະອົງໃຫ້ແກ່ຂ້ານ້ອຍ, ຂ້າແດ່ພຣະຢາເວ! ຂໍຊົງນຳຂ້ານ້ອຍໄປເທິງທາງທີ່ປອດ ເຫດເພາະພວກສັດຕູຂອງຂ້ານ້ອຍ.12ຂໍ
ຢ່າຊົງມອບຂ້ານ້ອຍໃຫ້ເປັນໄປຕາມໃຈຊອບຂອງພວກສັດຕຣູຂອງຂ້ານ້ອຍ ເພາະພວກຂີ້ຕົວະໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ, ແລະພວກເຂົາຫາຍໃຈ
ເອົາຄວາມໂຫດຮ້າຍອອກມາ!
13ຈະມີຫຍັງເກີດຂຶ້ນແກ່ຂ້ານ້ອຍຖ້າຂ້ານ້ອຍບໍ່ເຊື່ອວ່າຂ້ານ້ອຍຈະໄດ້ເຫັນຄວາມດີຂອງພຣະຢາເວໃນແຜ່ນດິນຂອງຄົນເປັນ?14ຈົ່ງລໍຖ້າພຣະຢາ
ເວ; ຈົ່ງເຂັ້ມແຂງ, ແລະຈົ່ງໃຫ້ໃຈຂອງທ່ານກ້າຫານເຖີດ! ຈົ່ງລໍຖ້າ ພຣະຢາເວ!


generated on Tue Jun 17 19:01:42 2025

28 ບົດເພງສັນຣະເສີນຂອງດາວິດ.1ສິ່ງເຖິງ, ຂ້າແດ່ພຣະຢາເວ, ຂ້ານ້ອຍຮ້ອງທູນຕໍ່ພຣະອົງ, ຂ້າແດ່ພຣະສີລາຂອງຂ້ານ້ອຍ. ຂໍຢ່າຊົງ
ເມີນເສີຍຂ້ານ້ອຍ ຖ້າພຣະອົງບໍ່ຊົງຕອບສະໜອງຕໍ່ຂ້ານ້ອຍ, ຂ້ານ້ອຍກໍຄົງຈະໄປພ້ອມກັບບັນດາຄົນທີ່ລົງໄປຍັງແດນມໍຣະນາ.2ຂໍຊົງຟັງ
ສຽງຮ້ອງວິງວອນຂອງຂ້ານ້ອຍເມື່ອຂ້ານ້ອຍຮ້ອງຂໍຄວາມຊ່ວຍເຫລືອຈາກພຣະອົງ, ເມື່ອຂ້ານ້ອຍຊູມືໄປຍັງພຣະວິຫານອັນບໍຣິສຸດຂອງພຣະ
ອົງ!

3ຂໍຢ່າຊົງດຶງຂ້ານ້ອຍໄປພ້ອມກັບຄົນຊົ່ວ ຄືບັນດາຄົນທີ່ເຮັດຄວາມຜິດບາບ, ຜູ້ທີ່ເວົ້າກັບເພື່ອນບ້ານຂອງພວກເຂົາຢ່າງສັນຕິແຕ່ມີຄວາມຊົ່ວຢູ່ໃນ
ໃຈຂອງພວກເຂົາ.4ຂໍຊົງໃຫ້ພວກເຂົາໄດ້ຮັບຢ່າງສະສົມກັບການກະທຳຂອງພວກເຂົາ ແລະຂໍຊົງຕອບສະໜອງພວກເຂົາຕາມຂະໜາດຄວາມ
ຊົ່ວຂອງພວກເຂົາ, ຂໍຊົງຕອບສະໜອງພວກເຂົາຕາມຜົນແຫ່ງນ້ຳມືຂອງພວກເຂົາແລະຂໍຊົງຕອບແທນພວກເຂົາໃຫ້ສະສົມ.5ເພາະພວກເຂົາບໍ່
ເຂົ້າໃຈຄຳຍ້ອງຍໍສັນຣະເສີນຂອງພຣະຢາເວຫລືຜົນງານແຫ່ງມືຂອງພຣະອົງ, ພຣະອົງຈະຊົງທຳລາຍ ພວກເຂົາລົງແລະບໍ່ຊົງສ້າງພວກເຂົາຂຶ້ນ
ມາອີກ.
6ຖວາຍຄຳຍ້ອງຍໍສັນຣະເສີນພຣະຢາເວເພາະພຣະອົງຊົງຟັງສຽງຮ້ອງຂໍຂອງຂ້ານ້ອຍ!7ພຣະຢາເວຊົງເປັນກຳລັງຂອງຂ້ານ້ອຍແລະເປັນໂລ້ຂອງ
ຂ້ານ້ອຍ; ໃຈຂອງຂ້ານ້ອຍວາງໃຈໃນພຣະອົງ, ແລະຂ້ານ້ອຍໄດ້ຮັບຄວາມຊ່ວຍເຫລືອ. ເພາະສະນັ້ນຈິດໃຈຂອງຂ້ານ້ອຍຈະປິຕິຍິນດີເປັນຢ່າງ
ຍິ່ງ, ແລະຂ້ານ້ອຍຈະສັນຣະເສີນພຣະອົງດ້ວຍການຮ້ອງເພງ.8ພຣະຢາເວຊົງເປັນກຳລັງຂອງປະຊາກອນຂອງພຣະອົງ, ແລະພຣະອົງຊົງເປັນທີ່ລີ້
ພັຍແຫ່ງຄວາມພົ້ນຂອງຜູ້ທີ່ພຣະອົງຊົງຫົດສົງ.
9ຂໍຊົງຊ່ວຍປະຊາກອນຂອງພຣະອົງໃຫ້ລອດ ແລະຂໍຊົງອວຍພອນມໍຣະດົກຂອງພຣະອົງ. ຂໍຊົງເປັນຜູ້ລ້ຽງດູພວກເຂົາແລະອຸ້ມຊູພວກເຂົາຕະ
ຫລອດໄປ.


generated on Tue Jun 17 19:01:42 2025

29 ບົດເພງສັນຣະເສີນຂອງດາວິດ. [1]ບັນດາລູກຂອງພຣະເຈົ້າເອີຍ, ຈົ່ງຖວາຍສັນຣະເສີນແດ່ພຣະຢາເວເຖີດ, ຈົ່ງຖວາຍສັນຣະເສີນແດ່ພຣະ
ຢາເວເພາະພຣະສະຫງ່າຣາສີແລະພຣະກຳລັງຂອງພຣະອົງ. [2]ຈົ່ງຖວາຍພຣະສະຫງ່າຣາສີຊຶ່ງຄວນແກ່ພຣະນາມຊື່ຂອງພຣະອົງແດ່ພຣະ
ຢາເວ. ຈົ່ງກົ້ມກາບພຣະຢາເວໃນຄວາມສະງ່າງາມແຫ່ງຄວາມບໍຣິສຸດ.

[3]ສຽງຂອງພຣະຢາເວໄດ້ຍິນຢູ່ເຫນືອນ້ຳທັງຫລາຍ; ພຣະເຈົ້າແຫ່ງສະຫງ່າຣາສີຊົງເປັ່ງສຽງດັ່ງຟ້າຮ້ອງ, ພຣະຢາເວຊົງແຜດສຽງຟ້າຮ້ອງ
ເຫນືອນ້ຳຫລວງຫລາຍ. [4]ສຽງຂອງພຣະຢາເວຊົງຣິດທານຸພາບ; ສຽງຂອງພຣະຢາເວຊົງມີອຳນາດບາຣະມີ. [5]ສຽງຂອງພຣະຢາເວຕັດຕົ້ນແປກ;
ພຣະຢາເວຊົງຕັດຕົ້ນແປກແຫ່ງເລບານອນລົງເປັນທ່ອນໆ.
[6]ພຣະອົງຊົງເຮັດໃຫ້ເລບານອນກະໂດດເຫມືອນລູກງົວແລະພູເຂົາເຮີໂມນເຕັ້ນດັ່ງກະທິງຫນຸ່ມ. [7]ສຽງຂອງພຣະຢາເວພົ່ນແປວໄຟອອກມາ. [8]ສຽງ
ຂອງພຣະຢາເວສັ່ນທີ່ແຫ້ງແລ້ງກັນດານ; ພຣະຢາເວຊົງສັ່ນຖິ່ນແຫ້ງແລ້ງກັນດານຄາເດັດ.
[9]ສຽງຂອງພຣະຢາເວເຮັດໃຫ້ຕົ້ນໂອກຫມຸນຄວ້າງແລະຊົງເຮັດໃຫ້ໃບໄມ້ລົ່ນລົງສູ່ພື້ນ. ທຸກຄົນໃນພຣະວິຫານຂອງພຣະອົງກ່າວວ່າ,
"ສະຫງ່າຣາສີ!" [10]ພຣະຢາເວຊົງປະທັບດັ່ງພຣະຣາຊາເຫນືອນ້ຳເລິກທັງຫລາຍ; ພຣະຢາເວຊົງປະທັບດັ່ງກະສັດຕະຫລອດໄປເປັນນິດ.
[11]ພຣະຢາເວປຣະທານກຳລັງໃຫ້ແກ່ປະຊາຊົນຂອງພຣະອົງ; ພຣະຢາເວຊົງອວຍພອນປະຊາຊົນຂອງພຣະອົງດ້ວຍຄວາມສະຫງົບສຸກ.

 generated on Tue Jun 17 19:01:42 2025

30 ເພງສັນຣະເສີນ; ເປັນບົດເພງທີ່ແຕ່ງຂຶ້ນຢູ່ໃນພຣະວິຫານ. ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະຢາເວ, ຂ້ານ້ອຍຈະຍົກຍ້ອງ, ພຣະ
ອົງ ເພາະພຣະອົງໄດ້ຊົງຍົກຂ້ານ້ອຍຂຶ້ນແລະບໍ່ຊົງປ່ອຍໃຫ້ສັດຕຣູຂອງຂ້ານ້ອຍໄດ້ຍິນດີເຫນືອຂ້ານ້ອຍ.[2]ຂ້າແດ່ພຣະຢາເວພຣະເຈົ້າຂອງ
ຂ້ານ້ອຍ! ຂ້ານ້ອຍຮ້ອງຂໍຄວາມຊ່ວຍເຫລືອຕໍ່ພຣະອົງ, ແລະພຣະອົງໄດ້ຊົງຮັກສາຂ້ານ້ອຍໃຫ້ຫາຍ.[3]ຂ້າແດ່ພຣະຢາເວ, ພຣະອົງໄດ້ຊົງນໍາຈິດ
ວິນຍານຂອງຂ້ານ້ອຍອອກຈາກແດນມໍຣະນາ; ພຣະອົງໄດ້ຊົງເຮັດໃຫ້ຂ້ານ້ອຍຍັງຄົງມີຊີວິດຈາກການລົງໄປຍັງຫລຸມແຫ່ງຄວາມຕາຍ.

[4]ພວກທ່ານຜູ້ເປັນປະຊາຊົນທີ່ສັດຊື່ຂອງພຣະອົງເອີຍ, ຈົ່ງຮ້ອງເພງສັນຣະເສີນແດ່ພຣະຢາເວ, ຈົ່ງຖວາຍຂອບພຣະຄຸນເມື່ອພວກທ່ານຣະນຶກເຖິງ
ຄວາມບໍຣິສຸດຂອງພຣະອົງ.[5]ເພາະຄວາມໂກດຮ້າຍຂອງພຣະອົງຄົງຢູ່ພຽງຊົ່ວຄາວເທົ່ານັ້ນ; ແຕ່ຄວາມພໍໃຈຂອງພຣະອົງຄົງຢູ່ຕະຫລອດໄປເປັນ
. ນິດ ການຮ້ອງໃຫ້ ຄົງຢູ່ພຽງຊົ່ວຄືນ, ແຕ່ຄວາມຊື່ນຊົມຍິນດີມາເຖິງໃນຍາມເຊົ້າ.
[6]ຂ້ານ້ອຍຈຶ່ງກ່າວດ້ວຍຄວາມຫມັ້ນໃຈວ່າ "ຂ້ານ້ອຍຈະບໍ່ມີທາງຫວັ່ນໄຫວເລີຍ"[7]ຂ້າແດ່ພຣະຢາເວ ໂດຍຄວາມພໍໃຈຂອງພຣະອົງ ພຣະອົງໄດ້
ສະຖາປະນາຂ້ານ້ອຍໄວ້ດັ່ງພູເຂົາທີ່ແຂງແກ່ນ ແຕ່ເມື່ອພຣະອົງໄດ້ຊົງລີ້ຫນ້າ ຂ້ານ້ອຍກໍລໍາບາກຫລາຍ[8]ຂ້າແດ່ພຣະຢາເວ ຂ້ານ້ອຍຮ້ອງທູນຕໍ່ພ
ຣະອົງ ແລະສະແຫວງຫາຄວາມພໍໃຈຈາກອົງພຣະຜູ້ເປັນເຈົ້າ
[9]ຖ້າຂ້ານ້ອຍໄປຍັງຫລຸມຝັງສົບ, ຈະມີປະໂຫຍດຫຍັງໃນຄວາມຕາຍຂອງຂ້ານ້ອຍ? ຜົງຂີ້ດິນນັ້ນຈະສັນຣະເສີນພຣະອົງບໍ່? ມັນຈະປະກາດເຖິງ
ຄວາມຈິງຂອງພຣະອົງບໍ່?[10]ຈົ່ງຟັງ, ຂ້າແດ່ພຣະຢາເວ, ຂໍຊົງໂຜດຟັງແລະເມດຕາຕໍ່ຂ້ານ້ອຍ! ຂ້າແດ່ພຣະຢາເວ, ຂໍຊົງເປັນຜູ້ອຸປະຖໍາຂອງຂ້າ
ນ້ອຍ.
[11]ພຣະອົງໄດ້ຊົງປ່ຽນຄວາມເສົ້າໂສກຂອງຂ້ານ້ອຍໃຫ້ກາຍເປັນການເຕັ້ນລໍາ; ພຣະອົງໄດ້ຊົງຖອດເສື້ອຜ້າກະສອບຂອງຂ້ານ້ອຍອອກແລະຊົງ
ສວມຂ້ານ້ອຍດ້ວຍຄວາມຍິນດີ.[12]ດັ່ງນັ້ນ ບັດນີ້ກຽຕຂອງຂ້ານ້ອຍຈະຮ້ອງເພງສັນຣະເສີນແດ່ພຣະອົງແລະຈະບໍ່ງຽບ; ຂ້າແດ່ພຣະຢາເວພຣະ
ເຈົ້າຂອງຂ້ານ້ອຍ, ຂ້ານ້ອຍຈະຖວາຍຂອບພຣະຄຸນແດ່ພຣະອົງຕະຫລອດໄປເປັນນິດ!

 generated on Tue Jun 17 19:01:42 2025

31 ເຖິງຄະນະນັກຮ້ອງ. ບົດເພງສັນຣະເສີນຂອງດາວິດ.[1]ໃນພຣະອົງ, ຂ້າແດ່ພຣະຢາເວ, ຂ້ານ້ອຍລີ້ພັຍໃນພຣະອົງ; ຂໍຢ່າຊົງປ່ອຍໃຫ້ຂ້າ
ນ້ອຍອັບອາຍ. ຂໍຊົງຊ່ວຍເຫລືອຂ້ານ້ອຍໃນຄວາມຊອບທັມຂອງພຣະອົງ.[2]ຂໍຊົງຟັງຂ້ານ້ອຍ; ຂໍຊົງຊ່ວຍເຫລືອຂ້ານ້ອຍ; ຂໍຊົງເປັນ
ພຣະສີລາທີ່ລີ້ພັຍຂອງຂ້ານ້ອຍ, ຊົງເປັນທີ່ກຳບັງເຂັ້ມແຂງທີ່ຈະຊ່ວຍຂ້ານ້ອຍໃຫ້ພົ້ນ.

[3]ເພາະພຣະອົງຊົງເປັນພຣະສີລາແລະປ້ອມປ້ອງກັນຂອງຂ້ານ້ອຍ; ຂໍຊົງນຳແລະພາຂ້ານ້ອຍໄປ, ເພື່ອເຫັນແກ່ພຣະນາມຊື່ຂອງພຣະອົງ.[4]ຂໍຊົງ
ປົດຂ້ານ້ອຍອອກຈາກຕາຂ່າຍທີ່ພວກເຂົາໄດ້ວາງເຊື່ອງໄວ້ດັກຂ້ານ້ອຍ, ເພາະພຣະອົງຊົງເປັນທີ່ລີ້ພັຍຂອງຂ້ານ້ອຍ.
[5]ຂ້ານ້ອຍຂໍມອບຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ, ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງຄວາມຈິງ ພຣະອົງຈະຊົງໄຖ່ຂ້ານ້ອຍ.
[6]ຂ້ານ້ອຍກຽດຊັງຜູ້ທີ່ຮັບໃຊ້ບັນດາຮູບເຄົາຣົບທີ່ໄຮ້ຄ່າ, ແຕ່ຂ້ານ້ອຍວາງໃຈໃນພຣະຢາເວ.[7]ຂ້ານ້ອຍຈະຊື່ນຊົມຍິນດີໃນຄວາມຊື່ສັດແຫ່ງພຣະ
ສັນຍາຂອງພຣະອົງ, ເພາະພຣະອົງແນມເຫັນຄວາມທຸກຍາກຂອງຂ້ານ້ອຍ ພຣະອົງຊົງຮູ້ເຖິງຄວາມທຸກໃຈຂອງຂ້ານ້ອຍ!
[8]ພຣະອົງບໍ່ໄດ້ຊົງມອບຂ້ານ້ອຍໄວ້ໃນມືສັດຕຣູຂອງຂ້ານ້ອຍ. ພຣະອົງໄດ້ວາງຕີນຂອງຂ້ານ້ອຍໄວ້ໃນທີ່ໂລ່ງກວ້າງ.[9]ຂ້າແດ່ພຣະຢາເວ, ຂໍ
ຊົງເມດຕາຕໍ່ຂ້ານ້ອຍ, ເພາະຂ້ານ້ອຍຢູ່ໃນຄວາມທຸກໃຈ; ດວງຕາຂອງຂ້ານ້ອຍກໍອິດເມື່ອຍໄປດ້ວຍຄວາມເສົ້າພ້ອມທັງຈິດໃຈແລະຮ່າງກາຍ
ຂອງຂ້ານ້ອຍ.
[10]ເພາະຊີວິດຂອງຂ້ານ້ອຍກໍອິດເມື່ອຍໄປດ້ວຍຄວາມໂສກເສົ້າແລະເດືອນປີຂອງຂ້ານ້ອຍກໍອິດເມື່ອຍໄປດ້ວຍການຄ້ຳຄວນ ກຳລັງຂອງຂ້ານ້ອຍກໍ
ຫມົດໄປເພາະຄວາມບາບຂອງຂ້ານ້ອຍ, ແລະກະດູກຂອງຂ້ານ້ອຍກໍຊຸດໂຊມໄປ.[11]ເພາະສັດຕຣູທັງປວງຂອງຂ້ານ້ອຍ, ເຮັດໃຫ້ຜູ້ຄົນດູຫມິ່ນຂ້າ
ນ້ອຍ; ເພື່ອນບ້ານຂອງຂ້ານ້ອຍກໍຕົກໃຈຢ້ານຕໍ່ຄວາມເປັນໄປຂອງຂ້ານ້ອຍ, ແລະບັນດາຄົນທີ່ຮູ້ຈັກຂ້ານ້ອຍຕ່າງກໍຢ້ານກົວ. ບັນດາຄົນທີ່ເຫັນຂ້າ
ນ້ອຍຕາມທາງກໍແລ່ນຫນີຈາກຂ້ານ້ອຍ.
[12]ຂ້ານ້ອຍຖືກລືມດັ່ງຄົນຕາຍແລ້ວທີ່ບໍ່ມີໃຜສົນໃຈ. ຂ້ານ້ອຍເປັນດັ່ງຫມໍ້ທີ່ແຕກແລ້ວ.[13]ເພາະຂ້ານ້ອຍໄດ້ຍິນສຽງຊຸມກັນເລື່ອງທີ່ຕາຢ້ານຫລາຍ
ຈາກທຸກດ້ານໃນຂະນະທີ່ພວກເຂົາຮ່ວມກັນວາງແຜນຕໍ່ສູ້ຂ້ານ້ອຍ. ພວກເຂົາຫມາຍທີ່ຈະເອົາຊີວິດຂອງຂ້ານ້ອຍ.
[14]ແຕ່ຂ້ານ້ອຍວາງໃຈໃນພຣະອົງ, ຂ້າແດ່ພຣະຢາເວ, ຂ້ານ້ອຍຈະກ່າວວ່າ, "ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ."[15]ປາຍທາງຂອງຂ້ານ້ອຍຢູ່
ໃນພຣະຫັດຂອງພຣະອົງ. ຂໍຊົງຊ່ວຍເຫລືອຂ້ານ້ອຍຈາກນ້ຳມືສັດຕຣູຂອງຂ້ານ້ອຍແລະຈາກບັນດາຄົນທີ່ໄລ່ລ່າຂ້ານ້ອຍ.[16]ຂໍຊົງໃຫ້
ພຣະພັກຂອງພຣະອົງຊົງສ່ອງແສງມາເຫນືອຜູ້ຮັບໃຊ້ຂອງພຣະອົງ; ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນໃນຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ.
[17]ຂ້າແດ່ພຣະຢາເວ, ຂໍຢ່າຊົງປ່ອຍໃຫ້ຂ້ານ້ອຍອັບອາຍ; ເພາະຂ້ານ້ອຍຮ້ອງຫາພຣະອົງ! ຂໍໃຫ້ຄົນຊົ່ວໄດ້ອັບອາຍ! ຂໍໃຫ້ພວກເຂົາມິດງຽບໃນ
ແດນມໍຣະນາ.[18]ຂໍໃຫ້ປາກຄົນຂີ້ຕົວະທີ່ເວົ້າດູຫມິ່ນນິນທາຄົນຊອບທັມຢ່າງອວດດີກາຍເປັນໃບ້.
[19]ຄວາມດີຂອງພຣະອົງນັ້ນຍິ່ງໃຫຍ່ຫລາຍ ທີ່ພຣະອົງໄດ້ຊົງສະສົມບັນດາຜູ້ທີ່ຢຳເກງພຣະອົງໄວ້, ທີ່ພຣະອົງໄດ້ຊົງເຮັດເພື່ອບັນດາຜູ້ທີ່ລີ້ພັຍໃນພ
ຣະອົງຕໍ່ຫນ້າບັນດາລູກຫລານທັງຫມົດຂອງມະນຸດ![20]ພຣະອົງໄດ້ຊົງເຊື່ອງພວກເຂົາໄວ້ໃນທີ່ກຳບັງຕໍ່ຫນ້າພຣະອົງ, ຈາກການປອງຮ້າຍຂອງມະ
ນຸດ. ພຣະອົງໄດ້ຊົງເຊື່ອງພວກເຂົາໄວ້ໃນທີ່ກຳບັງຈາກລີ້ນທີ່ຜິດຖຽງກັນ.
[21]ສັນຣະເສີນແດ່ພຣະຢາເວ, ເພາະພຣະອົງໄດ້ຊົງສຳແດງໃຫ້ຂ້ານ້ອຍເຫັນເຖິງຄວາມຊື່ສັດແຫ່ງພັນທະສັນຍາອັນມະຫັດສະຈັນຂອງພຣະອົງ
ເມື່ອຂ້ານ້ອຍຢູ່ເມືອງທີ່ຖືກລ້ອມໄວ້.[22]ແມ່ນວ່າຂ້ານ້ອຍຫລົງປາກເວົ້າວ່າ, "ຂ້ານ້ອຍຖືກຕັດຂາດໄປຈາກສາຍຕາຂອງພຣະອົງແລ້ວ," ແຕ່ພຣະອົງ
ຊົງໄດ້ຍິນຄຳຮ້ອງຂໍຄວາມຊ່ວຍເຫລືອຂອງຂ້ານ້ອຍເມື່ອຂ້ານ້ອຍຮ້ອງຕໍ່ພຣະອົງ.
[23]ໂອ, ທຸກຄົນທີ່ມີໃຈສັດຊື່ເອີຍ, ຈົ່ງຮັກພຣະຢາເວ, ພຣະຢາເວຊົງຄຸ້ມຄອງຜູ້ທີ່ສັດຊື່, ແຕ່ພຣະອົງຊົງຕອບແທນຜູ້ຈອງຫອງຢ່າງຕາມສົມຄວນ
ທີ່ໄດ້ຮັບ.[24]ຈົ່ງເຂັ້ມແຂງແລະເຊື່ອຫມັ້ນເຖີດ, ບັນດາທ່ານທີ່ວາງໃຈໃນຄວາມອຸປະຖຳຂອງພຣະຢາເວ.


generated on Tue Jun 17 19:01:42 2025

## 32 ບົດເພງຂອງດາວິດ.

[1-2]ບຸກຄົນຜູ້ທີ່ເຮັດຜິດຂອງເຂົາໄດ້ຮັບການອະພັຍກໍເປັນສຸກ, ຄືຜູ້ຊຶ່ງຄວາມບາບຂອງເຂົາໄດ້ຮັບການຍົກໂທດແລ້ວ. ບຸກຄົນທີ່ພຣະຢາເວບໍ່ຊົງ
ຖືໂທດແລະຜູ້ທີ່ຈິດວິນຍານຂອງເຂົາບໍ່ມີການຫລອກລວງກໍເປັນສຸກ.

[3]ເມື່ອຂ້ານ້ອຍຍັງມິດງຽບຢູ່, ກະດູກຂອງຂ້ານ້ອຍກໍຊຸດໂຊມໄປ ໃນຂະນະທີ່ຂ້ານ້ອຍໄດ້ຄ້ຳຄວນຕະຫລອດທັງວັນ.[4]ພຣະອົງຊົງລົງໂທດຢູ່ເທິງຂ້າ
ນ້ອຍຕະຫລອດທັງເວັນທັງຄືນ. ກຳລັງຂອງຂ້ານ້ອຍກໍອ່ອນແຮງລົງດັ່ງຄວາມແຫ້ງແລ້ງໃນຣະດູຮ້ອນ. ເສລາ
[5]ແລ້ວຂ້ານ້ອຍກໍຍອມສາຣະພາບຄວາມບາບຂອງຂ້ານ້ອຍຕໍ່ພຣະອົງ, ແລະຂ້ານ້ອຍບໍ່ເຊື່ອງຄວາມຜິດບາບຂອງຂ້ານ້ອຍອີກຕໍ່ໄປ. ຂ້ານ້ອຍທູນ
ວ່າ, "ຂ້ານ້ອຍຈະສາຣະພາບການຜິດຂອງຂ້ານ້ອຍຕໍ່ພຣະຢາເວ," ແລະພຣະອົງໄດ້ຊົງອະພັຍຄວາມຜິດບາບຂອງຂ້ານ້ອຍ. ເສລາ[6]ເພາະເຫດ
ນີ້, ບັນດາຜູ້ຊອບທັມທັງປວງຄວນອະທິຖານຕໍ່ພຣະອົງໃນຍາມມີຄວາມທຸກຍາກໃຫຍ່ຫລວງດັ່ງນ້ຳມາກໄຫລລັ່ງເຂົ້າມາ, ນ້ຳນັ້ນຈະບໍ່ໄຫລຖ້ວມ
ເຖິງຄົນເຫລົ່ານັ້ນ.
[7]ພຣະອົງຊົງເປັນທີ່ກຳບັງຂອງຂ້ານ້ອຍ; ພຣະອົງຊົງປົກປ້ອງຂ້ານ້ອຍຈາກຄວາມຍາກລຳບາກ. ພຣະອົງຈະຊົງລາຍລ້ອມຂ້ານ້ອຍດ້ວຍບົດເພງ
ແຫ່ງຊັຍຊະນະ. ເສລາ[8]ເຮົາຈະແນະນຳເຈົ້າແລະສອນເຈົ້າໃນທາງທີ່ເຈົ້າຄວນຈະໄປ. ເຮົາຈະແນະນຳເຈົ້າແລະຈັບຕາເບິ່ງເຈົ້າຢູ່.
[9]ຢ່າເປັນເຫມືອນມ້າຫລືລໍ, ທີ່ບໍ່ມີຄວາມເຂົ້າໃຈ; ຊຶ່ງຕ້ອງໃສ່ເຊືອກຂວາງປາກແລະບັງຫຽນເທົ່ານັ້ນເພື່ອຄວບຄຸມພວກມັນທີ່ຈະໃຫ້ພວກມັນໄປທີ່
ໃດໆ ຕາມທີ່ເຈົ້າຕ້ອງການໄດ້.[10]ຄົນຊົ່ວກໍມີຄວາມທຸກໂສກຫລວງຫລາຍ, ແຕ່ຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະຢາເວຈະລ້ອມຮອບຜູ້ທີ່
ວາງໃຈໃນພຣະອົງ ທ່ານຜູ້ຊອບທັມເອີຍ.
[11]ຈົ່ງຍິນດີແລະຊື່ນໃຈໃນພຣະຢາເວເຖີດ, ທຸກທ່ານທີ່ມີໃຈສັດຊື່ເອີຍ; ຈົ່ງໂຮຮ້ອງດ້ວຍຄວາມຊື່ນຊົມຍິນດີເຖີດ.


generated on Tue Jun 17 19:01:42 2025

33 [1]ທ່ານຜູ້ຊອບທັມ, ຈົ່ງຊື່ນຊົມຍິນດີໃນພຣະຢາເວ; ເປັນການສົມຄວນທີ່ຄົນທ່ຽງທັມຈະສັນຣະເສີນພຣະອົງ.[2]ຈົ່ງຖວາຍຂອບພຣະຄຸນແດ່ ພ
ຣະຢາເວດ້ວຍພິນ; ດ້ວຍການຮ້ອງເພງສັນຣະເສີນແດ່ພຣະອົງພ້ອມກັບພິນສິບສາຍ.[3]ຈົ່ງຮ້ອງເພງບົດໃຫມ່ຖວາຍແດ່ພຣະອົງ; ຈົ່ງຫລິ້ນ
ຢ່າງຄ່ອງແຄ້ວແລະຮ້ອງເພງດ້ວຍຄວາມຍິນດີ.

[4]ເພາະຖ້ອຍຄຳຂອງພຣະຢາເວນັ້ນທ່ຽງຕົງ, ແລະທຸກສິ່ງທີ່ພຣະອົງກະທຳນັ້ນດີງາມ.[5]ພຣະອົງຊົງຮັກຄວາມຊອບທັມແລະຄວາມສັດຊື່. ແຜ່ນດິນ
ໂລກເຕັມໄປດ້ວຍຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະຢາເວ.[6]ດ້ວຍຖ້ອຍຄຳຂອງພຣະຢາເວ ບັນດາທ້ອງຟ້າກໍໄດ້ຖືກສ້າງຂຶ້ນ, ແລະດວງ
ດາວທັງປວງໄດ້ຖືກສ້າງຂຶ້ນໂດຍລົມຈາກພຣະໂອດຂອງພຣະອົງ.
[7]ພຣະອົງຊົງຮວບຮວມນ້ຳໃນທະເລທຸກແຫ່ງເຂົ້າດ້ວຍກັນໃນບ່ອນດຽວ; ພຣະອົງຊົງເກັບມະຫາສະມຸດເລິກໄວ້ໃນບ່ອນຂອງມັນ.[8]ໃຫ້ທຸກສິ່ງທັງ
ແຜ່ນດິນໂລກຢຳເກງພຣະຢາເວເຖີດ; ໃຫ້ທຸກຄົນທີ່ອາສັຍຢູ່ໃນໂລກຈົ່ງໃຫ້ກຽດຕິຍົດແກ່ພຣະອົງໃນຄວາມຍິ່ງໃຫຍ່ຂອງພຣະອົງ.[9]ເພາະເມື່ອພ
ຣະອົງກ່າວ, ມັນກໍເປັນໄປຕາມນັ້ນ; ພໍພຣະອົງຊົງບັນຊາ, ມັນກໍເກີດຂຶ້ນມາ.
[10]ພຣະຢາເວຊົງຫມົດຄວາມອິດທິພົນກັບພັນທະມິດແຫ່ງປະຊາຊາຊົນທັງຫລາຍ; ພຣະອົງຊົງມ້າງແຜນການຕ່າງໆ ຂອງປະຊາຊົນທັງຫລາຍ.
[11]ບັນດາແຜນການຂອງພຣະຢາເວນັ້ນຢັ້ງຢືນຢູ່ເປັນນິດ, ຄືແຜນການໃນໃຈຂອງພຣະອົງສຳລັບທຸກຊົນຊາດ.[12]ຊົນຊາດທີ່ພຣະເຈົ້າຂອງເຂົາຄືພ
ຣະຢາເວກໍເປັນສຸກ, ຄືຊົນຊາດທີ່ພຣະອົງໄດ້ຊົງເລືອກໃຫ້ເປັນມໍຣະດົກຂອງພຣະອົງເອງ.
[13]ພຣະຢາເວຫລຽວລົງຈາກຟ້າສະຫວັນ; ພຣະອົງເຫັນປະຊາກອນທັງຫມົດ.[14]ຈາກສະຖານທີ່ພຣະອົງຢູ່, ພຣະອົງຫລຽວເຫັນເຫນືອບັນດາຜູ້
ອາສັຍຢູ່ເທິງແຜ່ນດິນໂລກທັງຫມົດ.[15]ພຣະອົງຜູ້ຊົງສ້າງຈິດໃຈຂອງພວກເຂົາທັງປວງແລະຊົງເຝົ້າເບິ່ງການກະທຳທັງຫມົດຂອງພວກເຂົາ.
[16]ກະສັດບໍ່ຫ່ອນຊະນະໄດ້ໂດຍກອງທັບມະຫາສານ; ນັກຮົບກໍບໍ່ລອດໄດ້ດ້ວຍກຳລັງທີ່ແຂງແຮງຂອງເຂົາເອງ.[17]ມ້າເສິກກໍເປັນຄວາມຫມັ້ນໃຈທີ່
ຈອມປອມສຳຫລັບຊັຍຊະນະ; ກຳລັງແຂງແຮງຂອງເຂົາກໍບໍ່ສາມາດຊ່ວຍເຫລືອເຂົາໄດ້ເລີຍ, ລາວບໍ່ສາມາດກູ້ພົຍໄດ້.
[18]ເບິ່ງເຖີດ, ສາຍຕາຂອງພຣະຢາເວຊົງຢູ່ເຫນືອບັນດາຜູ້ທີ່ຢຳເກງ ພຣະອົງ, ເຫນືອບັນດາຜູ້ທີ່ເຊື່ອຫມັ້ນໃນຄວາມຊື່ສັດແຫ່ງຄຳສັນຍາຂອງພ
ຣະອົງ[19]ເພື່ອນຳຊີວິດຂອງພວກເຂົາອອກຈາກຄວາມຕາຍແລະຮັກສາພວກເຂົາໃຫ້ມີຊີວິດຢູ່ໃນຍາມອຶດຢາກອາຫານ.
[20]ເຮົາທັງຫລາຍລໍຖ້າພຣະຢາເວ; ພຣະອົງຊົງເປັນຄວາມຊ່ວຍເຫລືອແລະຊົງເປັນໂລ້ຂອງເຮົາທັງຫລາຍ.[21]ຈິດໃຈຂອງເຮົາທັງຫລາຍຍິນດີໃນພ
ຣະອົງ, ເພາະເຮົາວາງໃຈໃນພຣະນາມຊື່ບໍຣິສຸດຂອງພຣະອົງ.
[22]ຂ້າແດ່ພຣະຢາເວ, ຂໍຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງຢູ່ກັບຂ້ານ້ອຍທັງຫລາຍ, ຕາມທີ່ຂ້ານ້ອຍທັງຫລາຍມີຄວາມວາງໃຈໃນພຣະອົງ.

 generated on Tue Jun 17 19:01:42 2025

34 ບົດເພງສັນຣະເສີນຂອງດາວິດ; ໃນເວລາທີ່ເຂົາກຳລັງທຳທ່າວ່າເປັນບ້າກ່ອນຫນ້າ ອຳມີເມເຫລັກ, ຜູ້ທີ່ຂັບໄລ່ລາວອອກ.[1]ຂ້ານ້ອຍຈະສັນ
ຣະເສີນພຣະຢາເວຕະຫລອດເວລາ, ຄຳສັນຣະເສີນຂອງພຣະອົງຈະຢູ່ທີ່ປາກຂອງຂ້ານ້ອຍສະເຫມີ.

[2]ຂ້ານ້ອຍຈະສັນຣະເສີນພຣະຢາເວ! ຂໍໃຫ້ຜູ້ທີ່ຖືກກົດຂີ່ໄດ້ຍິນແລະຊື່ນຊົມຍິນດີ.[3]ຈົ່ງສັນຣະເສີນພຣະຢາເວກັບຂ້ານ້ອຍເຖີດ, ໃຫ້ເຮົາຍົກຍ້ອງພ
ຣະນາມຊື່ຂອງພຣະອົງດ້ວຍກັນ.
[4]ຂ້ານ້ອຍໄດ້ສະແຫວງຫາພຣະຢາເວແລະພຣະອົງໄດ້ຊົງຕອບຂ້ານ້ອຍ, ແລະພຣະອົງໄດ້ປຣະທານຊັຍຊະນະເຫນືອຄວາມຢ້ານທັງຫມົດຂອງ
ຂ້ານ້ອຍ.[5]ບັນດາຜູ້ທີ່ຫລຽວເບິ່ງພຣະອົງຈະເບີກບານ, ແລະໃບຫນ້າຂອງພວກເຂົາຈະບໍ່ອັບອາຍ.[6]ຜູ້ທີ່ຖືກກົດຂີ່ຄົນນີ້ໄດ້ຮ້ອງຫາແລະພຣະຢາເວ
ໄດ້ຊົງຕອບເຂົາ ແລະໄດ້ຊົງຊ່ວຍໃຫ້ພົ້ນຈາກຄວາມຍາກລຳບາກທັງຫມົດຂອງເຂົາ.
[7]ທູດສະຫວັນຂອງພຣະຢາເວຕັ້ງຄ້າຍລ້ອມຮອບບັນດາຜູ້ທີ່ຢຳເກງພຣະອົງແລະຊ່ວຍເຫລືອພວກເຂົາ.[8]ຈົ່ງພິສູດແລະຈະເຫັນວ່າພຣະຢາເວຊົງ
ປະເສີດ. ບັນດາຜູ້ທີ່ລີ້ພັຍໃນພຣະອົງກໍເປັນສຸກ ບັນດາຜູ້ທີ່ປອດພັຍຢູ່ໃນພຣະອົງເອີຍ.[9]ຈົ່ງຢຳເກງພຣະຢາເວ, ປະຊາຊົນຜູ້ບໍຣິສຸດຂອງພຣະອົງ.
ບັນດາຜູ້ທີ່ຢຳເກງພຣະອົງບໍ່ຂາດເຂີນ.
[10]ແຕ່ບັນດາຜູ້ທີ່ສະແຫວງຫາພຣະຢາເວຈະບໍ່ຂາດສິ່ງດີໃດໆເລີຍ ແລະທຸກທໍຣະມານ, ແຕ່ບັນດາຜູ້ທີ່ເຫັນພຣະຢາເວຈະບໍ່ຂາດເຂີນອາຫານທີ່ດີ
ເລີຍ.[11]ມາເຖີດລູກຊາຍເອີຍ, ຈົ່ງຟັງເຮົາ, ເຮົາຈະສອນເຈົ້າເຖິງຄວາມຢຳເກງພຣະຢາເວ.
[12]ມີມະນຸດຄົນໃດແດ່ທີ່ປຣາຖນາຊີວິດແລະຮັກທີ່ຈະມີອາຍຸຍືນຍາວ, ເພື່ອເຂົາຈະໄດ້ເຫັນສິ່ງດີ?[13]ກໍຈົ່ງຮັກສາລີ້ນຂອງເຈົ້າຈາກຄວາມຊົ່ວແລະ
ຮັກສາຮີມສົບປາກຂອງເຈົ້າຈາກການເວົ້າຕົວະ.[14]ຈົ່ງຫັນຫນີຈາກຄວາມຊົ່ວແລະຈົ່ງເຮັດດີ. ຈົ່ງສະແຫວງຫາສັນຕິພາບແລະຕິດຕາມມັນ.
[15]ສາຍຕາຂອງພຣະຢາເວຊົງຢູ່ເຫນືອຄົນຊອບທັມແລະຫູຂອງພຣະອົງຊົງຟັງສຽງຮ້ອງຂໍຂອງພວກເຂົາ.[16]ພຣະພັກຂອງພຣະຢາເວຕໍ່ສູ້ບັນດາຜູ້
ເຮັດຊົ່ວ, ເພື່ອຈະຕັດຄວາມຊົງຈຳຂອງພວກເຂົາໄປຈາກແຜ່ນດິນໂລກ.[17]ຄົນຊອບທັມຮ້ອງຂໍແລະພຣະຢາເວຊົງຟັງເຂົາແລະພຣະອົງຊົງຊ່ວຍ
ເຫລືອພວກເຂົາຈາກຄວາມຍາກລຳບາກທັງຫມົດຂອງພວກເຂົາ.
[18]ພຣະຢາເວຊົງໃກ້ຊິດຜູ້ທີ່ຂາດກຳລັງໃຈ ແລະຊົງຊ່ວຍບັນດາຜູ້ທີ່ຫມົດຫວັງໃຫ້ໄດ້ພົ້ນ.[19]ຄົນຊອບທັມມີຄວາມຍາກລຳບາກຫລາຍຢ່າງ ແຕ່ພ
ຣະຢາເວຊົງຊ່ວຍນຳພວກເຂົາໃຫ້ພົ້ນອອກມາທັງຫມົດ[20]ພຣະອົງຊົງປົກປ້ອງກະດູກທຸກຊີກຂອງເຂົາ ແມ່ນແຕ່ກະດູກຊີກຫນຶ່ງກໍຈະບໍ່ຖືກຫັກຖິ້ມ.
[21]ຄວາມຊົ່ວຈະຂ້າຄົນຊົ່ວ. ບັນດາຜູ້ທີ່ກຽດຊັງຄວາມຊອບທັມຈະຖືກລົງໂທດ.[22]ພຣະຢາເວຊົງຊ່ວຍເຫລືອຊີວິດຂອງບັນດາຜູ້ຮັບໃຊ້ຂອງພຣະ
ອົງ. ບັນດາຜູ້ທີ່ລີ້ພັຍໃນພຣະອົງບໍ່ມີໃຜທີ່ຈະຖືກລົງໂທດ.


generated on Tue Jun 17 19:01:42 2025

35 1ຂ້າແດ່ພຣະຢາເວ ຂໍຊົງຕໍ່ຕ້ານບັນດາຜູ້ທີ່ຕໍ່ຕ້ານຂ້ານ້ອຍ ຂໍຊົງຕໍ່ສູ້ບັນດາຜູ້ທີ່ຕໍ່ສູ້ຂ້ານ້ອຍ2ຂໍຊົງໂຜດຈັບໂລ້ແລະເສື້ອຫຸ້ມເກາະຂອງພຣະອົງ
ຂໍຊົງລຸກຂຶ້ນແລະຊ່ວຍກູ້ຂ້ານ້ອຍ3ຂໍຊົງໃຊ້ຫອກແລະຂວານຂຶ້ນຕໍ່ສູ້ບັນດາຜູ້ທີ່ໄລ່ຕາມຂ້ານ້ອຍ ຂໍຊົງກ່າວແກ່ຈິດໃຈຂອງຂ້ານ້ອຍວ່າ "ເຮົາ
ເປັນຄວາມພົ້ນຂອງເຈົ້າ"

4ຂໍໃຫ້ບັນດາຜູ້ສະແຫວງຫາຊີວິດຂອງຂ້ານ້ອຍໄດ້ອັບອາຍແລະແລະພ່າຍແພ້. ຂໍໃຫ້ບັນດາຜູ້ວາງແຜນເຮັດຮ້າຍຂ້ານ້ອຍໄດ້ຫັນກັບໄປແລະ
ພ່າຍແພ້.5ຂໍໃຫ້ພວກເຂົາເປັນຄືຂີ້ແກບຕໍ່ຫນ້າລົມ, ເມື່ອທູດສະຫວັນຂອງພຣະຢາເວຂັບໄລ່ພວກເຂົາໄປ.6ຂໍໃຫ້ທາງຂອງພວກເຂົາມືດມິດແລະ
ມື່ນພະລາດ, ເມື່ອທູດສະຫວັນຂອງພຣະຢາເວຂັບໄລ່ພວກເຂົາໄປ.
7ພວກເຂົາໄດ້ຫ້າງແຮ້ວໃສ່ຂ້ານ້ອຍໂດຍບໍ່ມີສາເຫດ; ພວກເຂົາໄດ້ຂຸດຂຸມດັກຈັບຊີວິດຂ້ານ້ອຍໃຫ້ຕົກລົງໃນຂຸມນັ້ນ.8ຂໍໃຫ້ພັຍພິບັດຕາມທັນ
ພວກເຂົາຢ່າງບໍ່ທັນຕັ້ງຕົວ. ຂໍໃຫ້ພວກເຂົາຕິດແຮ້ວທີ່ວາງໄວ້ເອງ. ຂໍໃຫ້ພວກເຂົາຕົກລົງໄປໃນພັຍພິບັດຂອງພວກເຂົາເອງ.
9ແຕ່ຂ້ານ້ອຍຈະຊື່ນຊົມຍິນດີໃນພຣະຢາເວແລະປິຕິຍິນດີໃນການຊ່ວຍໃຫ້ພົ້ນຂອງພຣະອົງ.10ກະດູກທຸກຊິກຂອງຂ້ານ້ອຍຈະເວົ້າວ່າ, "ຂ້າແດ່ພ
ຣະຢາເວ, ຜູ້ໃດເປັນດັ່ງພຣະອົງ ຜູ້ຊົງຊ່ວຍເຫລືອຄົນທີ່ຖືກຂົ່ມເຫັງຈາກພວກທີ່ແຂງແຮງເກີນໄປສຳຫລັບພວກເຂົາ ແລະຊົງຊ່ວຍເຫລືອຄົນ
ຍາກຈົນແລະຂັດສົນຈາກຜູ້ທີ່ຫາທາງປຸ້ນພວກເຂົາ?"
11ພວກພະຍານຄົນຊົ່ວກໍລຸກຂຶ້ນ; ພວກເຂົາເວົ້າຕົວະໃສ່ຮ້າຍຂ້ານ້ອຍ.12ພວກເຂົາຕອບແທນຄວາມດີຂອງຂ້ານ້ອຍດ້ວຍຄວາມຊົ່ວ. ຂ້ານ້ອຍເສົ້າ
ໃຈ.
13ແຕ່, ເມື່ອຍາມທີ່ພວກເຂົາເຈັບປ່ວຍ, ຂ້ານ້ອຍໄດ້ໃສ່ເຄື່ອງໄວ້ທຸກ; ຂ້ານ້ອຍໄດ້ຖືສິນອົດອາຫານເພື່ອພວກເຂົາດ້ວຍກົ້ມຫົວລົງ
ພາວັນນາອະທິຖານ.14ຂ້ານ້ອຍເປັນທຸກໂສກເສົ້າເພື່ອພີ່ນ້ອງຂອງຂ້ານ້ອຍ; ຂ້ານ້ອຍໂນ້ມຕົວລົງໄວ້ທຸກເຫມືອນໄວ້ທຸກໃຫ້ແກ່ແມ່ຂອງຂ້ານ້ອຍ.
15ແຕ່ເມື່ອຂ້ານ້ອຍສະດຸດລົ້ມ, ພວກເຂົາກັບດີໃຈແລະສຸມຫົວກັນ; ພວກເຂົາສຸມຫົວກັນຕໍ່ສູ້ຂ້ານ້ອຍ, ໂດຍທີ່ຂ້ານ້ອຍບໍ່ທັນຮູ້ຕົວ. ພວກເຂົາບໍ່ຢຸດ
ທີ່ຈະຈີກຂ້ານ້ອຍຖິ້ມ.16ພວກເຂົາເຢາະເຢີ້ຍຂ້ານ້ອຍຢ່າງລົບລູ່; ພວກເຂົາກັດແຂ້ວໃສ່ຂ້ານ້ອຍ.
17ຂ້າແດ່ພຣະຜູ້ເປັນເຈົ້າ, ພຣະອົງຈະຊົງຫລຽວເບິ່ງອີກດົນປານໃດ? ຂໍຊົງຊ່ວຍກູ້ຈິດວິນຍານຂອງຂ້ານ້ອຍຈາກການຈູ່ໂຈມທຳລາຍຂອງພວກ
ເຂົາ, ຂໍຊົງຊ່ວຍຊີວິດຂ້ານ້ອຍຈາກຝູງສິງໂຕ.18ແລ້ວຂ້ານ້ອຍຈະຂອບພຣະຄຸນພຣະອົງໃນທີ່ປະຊຸມໃຫຍ່; ຂ້ານ້ອຍຈະສັນຣະເສີນພຣະອົງໃນ
ທ່າມກາງປະຊາຊົນຫລວງຫລາຍ.
19ຂໍຢ່າໃຫ້ສັດຕຣູຄືຄົນຂີ້ຕົວະຂອງຂ້ານ້ອຍໄດ້ດີໃຈເຫນືອຂ້ານ້ອຍ; ຂໍຊົງຢ່າໃຫ້ພວກເຂົາໄດ້ເຮັດຕາມແຜນຊົ່ວຂອງພວກເຂົາ.20ເພາະພວກເຂົາ
ບໍ່ໄດ້ເວົ້າຈາດ້ວຍສັນຕິພາບ, ແຕ່ພວກເຂົາຄິດຖ້ອຍຄຳຫລອກລວງຕໍ່ຕ້ານບັນດາຜູ້ທີ່ຢູ່ຢ່າງສະຫງົບໃນແຜ່ນດິນຂອງຂ້ານ້ອຍທັງຫລາຍ.
21ພວກເຂົາອ້າປາກກວ້າງໃສ່ຂ້ານ້ອຍ; ພວກເຂົາໄດ້ເວົ້າວ່າ,"ຫັ້ນເດ, ຫັ້ນເດ, ພວກເຮົາໄດ້ເຫັນກັບຕາແລ້ວ."22ພຣະອົງໄດ້ຊົງຫລຽວເຫັນແລ້ວ,
ຂ້າແດ່ພຣະຢາເວ, ຂໍຢ່າຊົງງຽບ; ຂ້າແດ່ພຣະອົງຜູ້ເປັນເຈົ້າ, ຂໍຢ່າຊົງສະຖິດໄກຈາກຂ້ານ້ອຍ.23ຂໍຊົງລຸກຂຶ້ນແລະຊົງຕື່ນເພື່ອຄວາມເປັນທັມຂອງ
ຂ້າ; ຂ້າແດ່ພຣະເຈົ້າແລະອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍ, ຂໍຊົງໃຫ້ຄວາມເປັນທັມແກ່ຂ້ານ້ອຍດ້ວຍເຖີດ.
24ຂໍຊົງໃຫ້ຄວາມເປັນທັມແກ່ຂ້ານ້ອຍ, ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ເພາະຄວາມຊອບທັມຂອງພຣະອົງ; ຂໍຢ່າໃຫ້ພວກເຂົາໄດ້ດີໃຈ
ເຫນືອຂ້ານ້ອຍ25ຂໍຢ່າໃຫ້ພວກເຂົາຄິດໃນໃຈວ່າ, "ຫັ້ນເດ, ເຮົາໄດ້ສິ່ງທີ່ເຮົາຕ້ອງການແລ້ວ." ຂໍຢ່າໃຫ້ພວກເຂົາເວົ້າວ່າ, "ເຮົາໄດ້ກືນກິນເຂົາ
ແລ້ວ."26ຂໍຊົງໃຫ້ບັນດາຄົນທີ່ຢາກທຳຮ້າຍຂ້ານ້ອຍໄດ້ອັບອາຍແລະພ່າຍແພ້. ຂໍໃຫ້ບັນດາຜູ້ທີ່ເຢາະເຢີ້ຍຂ້ານ້ອຍໄດ້ຄຸມຕົວດ້ວຍຄວາມອາຍ
ແລະຄວາມພ່າຍແພ້.
27ຂໍໃຫ້ບັນດາຜູ້ທີ່ປຣາຖະນາເຫັນຂ້ານ້ອຍມີຊັຍໄດ້ໂຮ່ຮ້ອງດ້ວຍຄວາມຍິນດີແລະປິຕິຍິນດີ; ຂໍໃຫ້ພວກເຂົາເວົ້າຕະຫລອດໄປວ່າ, "ຈົ່ງສັນຣະ
ເສີນພຣະຢາເວ, ພຣະອົງຜູ້ຊົງພໍໃຈໃນຄວາມຈະເຣີນຮຸ່ງເຮືອງຂອງຜູ້ຮັບໃຊ້ຂອງພຣະອົງ."28ແລ້ວຂ້ານ້ອຍຈະກ່າວເຖິງຄວາມຍຸຕິທັມຂອງພຣະ
ອົງແລະສັນຣະເສີນພຣະອົງຕະຫລອດທັງມື້.


generated on Tue Jun 17 19:01:42 2025

36 [1]ຄົນຊົ່ວເວົ້າເຖິງຄວາມບາບຂອງເຂົາຈາກສ່ວນເລິກໃນໃຈຂອງເຂົາ ບໍ່ມີຄວາມເກງກົວພຣະເຈົ້າຢູ່ໃນສາຍຕາຂອງເຂົາ[2]ເພາະເຂົາປອບໃຈ
ຕົນເອງ ຄິດວ່າບາບຂອງເຂົາຈະບໍ່ຖືກຄົ້ນພົບແລະບໍ່ເປັນທີ່ລັງກຽດ

[3]ຄໍາເວົ້າຂອງເຂົາກໍເຕັມໄປດ້ວຍບາບແລະການຫລອກລວງ; ເຂົາບໍ່ຕ້ອງການເປັນຄົນສະຫລາດແລະເຮັດດີ.[4]ໃນຂະນະທີ່ເຂົານອນໃນທີ່ນອນ,
ເຂົາວາງແຜນທີ່ຈະເຮັດບາບໄວ້ຫລາຍວິທີ; ເຂົາມຸ້ງໄປທາງຊົ່ວ; ເຂົາບໍ່ປະຕິເສດຄວາມຊົ່ວເລີຍຂ້າແດ່ພຣະຢາເວ.
[5]ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງໄປເຖິງຟ້າສະຫວັນ, ພຣະຢາເວ, ຄວາມສະເຫມີຕົ້ນສະເຫມີປາຍຂອງພຣະອົງໄປເຖິງຫມູ່ເມກ.[6]ຄວາ
ມຊອບທັມຂອງພຣະອົງເປັນດັ່ງບັນດາພູເຂົາຂອງພຣະເຈົ້າ; ການພິພາກສາຂອງພຣະອົງເປັນດັ່ງທະເລເລິກ. ຂ້າແດ່ພຣະຢາເວ, ພຣະອົງຊົງປົກ
ປ້ອງທັງບັນດາມະນຸດແລະສັດທັງຫລາຍ.
[7]ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງນັ້ນມີຄ່າຫລາຍ, ຂ້າແດ່ພຣະເຈົ້າ! ມະນຸດທັງຫລາຍເຂົ້າລີ້ພັຍພາຍໃຕ້ຮົ່ມປີກຂອງພຣະອົງ.[8]ພວກເຂົາ
ຈະອີ່ມຢ່າງອຸດົມສົມບູນດ້ວຍຄວາມຮັ່ງມີດ້ວຍອາຫານອັນດີຂອງພຣະອົງ; ພຣະອົງຈະຊົງໃຫ້ພວກເຂົາດື່ມຈາກແມ່ນໍ້າແຫ່ງພຣະພອນອັນມີຄ່າ
ຂອງພຣະອົງ.[9]ເພາະນໍ້າພຸແຫ່ງຊີວິດຢູ່ກັບພຣະອົງ; ເຮົາເຫັນຄວາມສະຫວ່າງໃນແສງສະຫວ່າງຂອງພຣະອົງ.
[10]ຂໍຊົງຂະຫຍາຍຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງໄປຍັງບັນດາຜູ້ທີ່ຮູ້ຈັກພຣະອົງຢ່າງເຕັມຂະຫນາດ, ແລະການປົກປ້ອງຂອງພຣະອົງ
ແກ່ຜູ້ທີ່ມີໃຈທ່ຽງທັມ.[11]ຂໍຢ່າໃຫ້ຕີນຂອງຄົນຈອງຫອງມາໃກ້ຂ້ານ້ອຍ. ຂໍຢ່າໃຫ້ມືຂອງຄົນຊົ່ວຂັບໄລ່ຂ້ານ້ອຍໄປ. [12]ບັນດາຄົນເຮັດຊົ່ວກໍໄດ້ລົ້ມລົງ
ທີ່ນັ້ນ; ພວກເຂົາຖືກຊັດລົງແລະບໍ່ສາມາດລຸກຂຶ້ນໄດ້.


generated on Tue Jun 17 19:01:42 2025

37 ບົດເພງສັນຣະເສີນຂອງດາວິດ.

[1]ຢ່າກັງວົນໃຈເພາະພວກຄົນເຮັດຊົ່ວ; ຢ່າອິດສາບັນດາຜູ້ປະພຶດຊົ່ວຮ້າຍ.[2]ເພາະອີກບໍ່ດົນພວກເຂົາຈະແຫ້ງໄປຄືຫຍ້າແລະຫ່ຽວໄປຄືພືດສີດ.

[3]ຈົ່ງວາງໃຈໃນພຣະຢາເວ ແລະເຮັດສິ່ງທີ່ດີ; ຈົ່ງຢູ່ອາສັຍໃນແຜ່ນດິນແລະໄດ້ຮັບການລ້ຽງດູຢ່າງດີເຖີດ.[4]ແລ້ວຈົ່ງປິຕິຍິນດີໃນພຣະຢາເວ, ແລະ
ພຣະອົງຈະປຣະທານຕາມໃຈປຣາຖນາຂອງທ່ານ.
[5]ຈົ່ງມອບທາງຂອງເຈົ້າໃຫ້ແກ່ພຣະຢາເວ; ຈົ່ງວາງໃຈໃນພຣະອົງ, ແລະພຣະອົງຈະຊົງເຮັດແທນເຈົ້າ.[6]ພຣະອົງຈະເຮັດໃຫ້ຄວາມຊອບທັມຂອງ
ເຈົ້າຈະເຮີນຮຸ່ງເຮືອງອອກໄປເຫມືອນດັ່ງຕາເວັນໃນຍາມທ່ຽງ.
[7]ຈົ່ງສະຫງົບຢູ່ຕໍ່ຫນ້າພຣະຢາເວແລະລໍຖ້າພຣະອົງດ້ວຍຄວາມພຽນ. ຢ່າກັງວົນຖ້າບາງຄົນປະສົບຄວາມສຳເລັດໃນສິ່ງທີ່ເຂົາເຮັດຫລືເມື່ອເຂົາ
ວາງແຜນຊົ່ວ.
[8]ຢ່າຮ້າຍແລະວຸ້ນວາຍເລີຍ. ຢ່າວິຕົກກັງວົນ.[9]ພວກຄົນເຮັດຊົ່ວຈະຖືກຕັດອອກໄປ, ແຕ່ບັນດາຜູ້ທີ່ລໍຖ້າພຣະຢາເວຈະໄດ້ຮັບແຜ່ນດິນເປັນມໍຣະ
ດົກ.[10]ອີກຈັກຫນ້ອຍຄົນຊົ່ວກໍຈະສູນຫາຍໄປ; ທ່ານຈະເບິ່ງສະຖານທີ່ຂອງເຂົາ, ແຕ່ວ່າເຂົາຈະຈາກໄປແລ້ວ.
[11]ແຕ່ຄົນທີ່ມີໃຈອ່ອນສຸພາບຈະໄດ້ຮັບແຜ່ນດິນເປັນມໍຣະດົກແລະຈະເບີກບານໃນຄວາມຈະເຮີນຮັ່ງມີຢ່າງຫລວງຫລາຍ.[12]ຄົນຊົ່ວປອງຮ້າຍຄົນ
ຊອບທັມແລະກັດແຂ້ວຄ້ຽວຟັນໃສ່ເຂົາ.[13]ອົງພຣະຜູ້ເປັນເຈົ້າຊົງຫົວຂວັນໃສ່ເຂົາ, ເພາະພຣະອົງຊົງເຫັນວ່າວັນເວລາຂອງເຂົາໃກ້ເຂົ້າມາແລ້ວ.
[14]ພວກຄົນຊົ່ວໄດ້ຖອດດາບຂອງພວກເຂົາອອກແລະກົ່ງຄັນທະນູເພື່ອຍິງໄປຍັງຄົນທີ່ຖືກຂົ່ມເຫັງແລະຄົນທີ່ຂັດສົນ, ເພື່ອຂ້າບັນດາຜູ້ທີ່ຊອບທັມ.
[15]ໃຈຂອງພວກຄົນຊົ່ວຈະຖືກແທງດ້ວຍດາບຂອງພວກເຂົາເອງ, ແລະຄັນທະນູຂອງພວກເຂົາຈະຫັກ.
[16]ສິ່ງເລັກໆ ນ້ອຍໆ ທີ່ຄົນຊອບທັມມີກໍດີກວ່າຄວາມອຸດົມສົມບູນຂອງຄົນຊົ່ວຈຳນວນຫລາຍ.[17]ເພາະພຣະອົງຈະໃຫ້ກຳລັງຂອງຄົນຊົ່ວຫາຍໄປ,
ແຕ່ພຣະຢາເວຊົງຄຸ້ມຄອງຄົນຊອບທັມໄວ້.
[18]ພຣະຢາເວຊົງເຝົ້າເບິ່ງຄົນທີ່ເຊື່ອຟັງມື້ຕໍ່ມື້, ແລະມໍຣະດົກຂອງພວກເຂົາຈະຢັ້ງຢືນເປັນນິດ.[19]ພວກເຂົາຈະບໍ່ອັບອາຍເມື່ອເຖິງຍາມຊົ່ວຮ້າຍ.
ເມື່ອຄວາມອຶດຢາກມາເຖິງ, ພວກເຂົາຈະມີກິນຢ່າງພຽງພໍ.
[20]ແຕ່ຄົນຊົ່ວຈະຕາຍໄປ. ພວກສັດຕຣູຂອງພຣະຢາເວຈະເປັນດັ່ງຄວາມສະງ່າງາມຂອງທົ່ງຫຍ້າ; ພວກເຂົາຈະຖືກເຜົາຜານແລະຫັບຫາຍໄປໃນ
ຄວັນ.[21]ຄົນຊົ່ວຂໍຢືມແລະບໍ່ຈ່າຍຄືນ, ແຕ່ຄົນຊອບທັມນັ້ນໃຈກວ້າງແລະແຈກຈ່າຍ.
[22]ບັນດາຜູ້ທີ່ພຣະເຈົ້າຊົງອວຍພຣະພອນໄດ້ຮັບແຜ່ນດິນເປັນມໍຣະດົກ; ບັນດາຜູ້ທີ່ພຣະອົງຊົງສາບແຊ່ງ ຈະຖືກຕັດອອກໄປ.[23]ກ້າວຕີນຂອງມະ
ນຸດຕັ້ງຫມັ້ນຄົງຢູ່ໄດ້ໂດຍພຣະຢາເວ, ຄືຄົນທີ່ທາງຂອງເຂົາເປັນທີ່ຍົກຍ້ອງ ໃນສາຍຕາຂອງພຣະຢາເວ.[24]ແມ່ນວ່າເຂົາສະດຸດ, ເຂົາຈະບໍ່ລົ້ມລົງ,
ເພາະພຣະຢາເວຊົງປະຄອງເຂົາໄວ້ດ້ວຍມືຂອງພຣະອົງ.
[25]ຂ້ານ້ອຍເຄີຍຫນຸ່ມແລະດຽວນີ້ກໍເຖົ້າແກ່ແລ້ວ; ຂ້ານ້ອຍບໍ່ເຄີຍເຫັນຄົນຊອບທັມຖືກຖິ້ມຫລືລູກຫລານຂອງເຂົາຂໍທານເພື່ອຈະໄດ້ອາຫານ.
[26]ເຂົາມີເມດຕາແລະໃຫ້ຢືມມາຍາວນານ, ແລະລູກຫລານຂອງເຂົາກໍກາຍເປັນພອນ.[27]ຈົ່ງຫັນຫນີຈາກຄວາມຊົ່ວແລະເຮັດສິ່ງທີ່ຖືກຕ້ອງ; ແລ້ວ
ທ່ານຈະຢູ່ຢ່າງປອດພັຍຕະຫລອດໄປ.
[28]ເພາະພຣະຢາເວຊົງຮັກຄວາມຍຸຕິທັມແລະບໍ່ຖິ້ມຜູ້ທີ່ຕິດຕາມຢ່າງຊື່ສັດ. ພວກເຂົາຈະໄດ້ຮັບການຮັກສາໄວ້ຕະຫລອດໄປເປັນນິດ, ແຕ່ບັນດາ
ລູກຫລານຂອງຄົນຊົ່ວຈະຖືກຕັດອອກໄປເສຍ.[29]ຄົນຊອບທັມຈະໄດ້ຮັບແຜ່ນດິນເປັນມໍຣະດົກແລະອາສັຍຢູ່ທີ່ນັ້ນຕະຫລອດໄປເປັນນິດ.[30]ປາກ
ຂອງຄົນຊອບທັມເວົ້າເຖິງປັນຍາແລະເພີ່ມພູນຄວາມຍຸຕິທັມ.
[31]ກົດບັນຍັດຂອງພຣະເຈົ້າຂອງເຂົາຢູ່ໃນໃຈຂອງເຂົາ; ຕີນຂອງເຂົາຈະບໍ່ມື່ນຖະໄຫລ.[32]ຄົນຊົ່ວຖ້າເບິ່ງຄົນຊອບທັມແລະຫາທາງຂ້າເຂົາເສຍ.[33]ພ
ຣະຢາເວຈະບໍ່ຊົງຖິ້ມເຂົາໄວ້ໃນເງື້ອມມືຂອງຄົນຊົ່ວຫລືຊົງລົງໂທດເຂົາເມື່ອພຣະອົງຊົງພິພາກສາ.
[34]ຈົ່ງລໍຖ້າພຣະຢາເວແລະຮັກສາທາງຂອງພຣະອົງໄວ້, ແລະພຣະອົງຈະຊົງຍົກທ່ານຂຶ້ນໃຫ້ຄອບຄອງແຜ່ນດິນ. ທ່ານຈະເບິ່ງເຫັນເມື່ອຄົນຊົ່ວຖືກ
ຕັດອອກໄປ.
[35]ຂ້ານ້ອຍເຄີຍເຫັນຄົນຊົ່ວແລະຄົນທີ່ຫນ້າຢ້ານແຜ່ຢາຍອອກໄປເຫມືອນຕົ້ນໄມ້ຂຽວທີ່ປູກໃນດິນທີ່ເຫມາະສົມກັບມັນ.[36]ແຕ່ເມື່ອຂ້ານ້ອຍຜ່ານ
ໄປອີກຄັ້ງຫນຶ່ງ, ເຂົາກໍບໍ່ຢູ່ທີ່ນັ້ນແລ້ວ. ຂ້ານ້ອຍເບິ່ງຫາເຂົາ ແຕ່ກໍບໍ່ພົບເລີຍ.
[37]ຈົ່ງເຝົ້າເບິ່ງຄົນທີ່ມີຄວາມຊື່ສັດສຸຈະຣິດ, ແລະຈົ່ງຫມາຍຄົນທ່ຽງຕຣົງໄວ້; ເພາະມີອານາຄົດທີ່ດີສຳຫລັບຄົນສະງົບສຸກ.[38]ຄົນບາບຈະຖືກທຳ
ລາຍໄປຢ່າງສິ້ນເຊີງ; ອານະຄົດຂອງຄົນຊົ່ວກໍຖືກຕັດອອກໄປ.
[39]ຄວາມພົ້ນຂອງຄົນຊອບທັມມາຈາກພຣະຢາເວ; ພຣະອົງຊົງປົກປ້ອງພວກເຂົາໃນຍາມຍາກລຳບາກ.[40]ພຣະຢາເວຊົງຄຸ້ມຄອງພວກເຂົາແລະຊົງ
ຊ່ວຍເຫລືອພວກເຂົາ. ພຣະອົງຊົງຊ່ວຍກູ້ພວກເຂົາຈາກພວກຄົນຊົ່ວແລະຊ່ວຍພວກເຂົາໃຫ້ພົ້ນເພາະພວກເຂົາໄດ້ລີ້ພັຍໃນພຣະອົງ.

 generated on Tue Jun 17 19:01:42 2025

38 ບົດເພງສັນຣະເສີນຂອງດາວິດ, ເພື່ອເຮັດໃຫ້ຄວາມຊົງຈຳ.1ຂ້າແດ່ ພຣະຢາເວ, ຂໍຢ່ານາບຂູ່ຂ້ານ້ອຍດ້ວຍຄວາມຮ້າຍຂອງພຣະອົງ; ຂໍຢ່າ
ຊົງລົງໂທດຂ້ານ້ອຍດ້ວຍຄວາມໂກດຮ້າຍຂອງພຣະອົງ.2ເພາະລູກທະນູຂອງພຣະອົງປັກເຂົ້າໃນຕົວຂ້ານ້ອຍ, ແລະມືຂອງພຣະອົງໄດ້ກົດຂ້າ
ນ້ອຍລົງ.

3ທັງຮ່າງກາຍຂອງຂ້ານ້ອຍກໍເຈັບປ່ວຍເນື່ອງດ້ວຍຄວາມຮ້າຍ ຂອງພຣະອົງ; ເປັນເພາະຄວາມບາບຂອງຂ້ານ້ອຍ ກະດູກຂອງຂ້ານ້ອຍຈຶ່ງບໍ່ມີສະ
ພາບດີເລີຍ.4ເພາະຄວາມຜິດບາບຂອງຂ້ານ້ອຍຖ້ວມຂ້ານ້ອຍ; ມັນເປັນພາຣະທີ່ຫນັກເກີນໄປສຳຫລັບຂ້ານ້ອຍ.
5ບາດແຜທັງຫລາຍຂອງຂ້ານ້ອຍກໍຕິດເຊື້ອແລະເຫມັນເນົ່າກໍເພາະບາບອັບໂງ່ຈ້າຂອງຂ້ານ້ອຍ.6ຂ້ານ້ອຍນ້ອມຕົວລົງແລະອັບອາຍຢູ່ທຸກມື້; ຂ້າ
ນ້ອຍໃຊ້ຊີວິດຢ່າງທຸກໂສກຕະຫລອດວັນຍັງຄ່ຳ.
7ສຳຫລັບພາຍໃນຂອງຂ້ານ້ອຍ, ເພາະຂ້ານ້ອຍເຕັມໄປດ້ວຍຮອຍໄຫມ້ພາຍໃນຂ້ານ້ອຍ; ເນື້ອຫນັງຂອງຂ້ານ້ອຍບໍ່ມີສະພາບດີເລີຍ.8ຂ້ານ້ອຍ
ຫມົດແຮງແລະຖືກຂະຍີ້ຢ່າງຮຸນແຮງ; ຂ້ານ້ອຍຮ້ອງຄາງເພາະຄວາມເຈັບປວດໃນໃຈຂອງຂ້ານ້ອຍ.
9ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະອົງຊົງເຂົ້າໃຈຄວາມປຣາຖນາຈາກກົ້ນບຶ້ງໃນໃຈຂອງຂ້ານ້ອຍ ແລະການຄ້ຳຄວນຂອງຂ້ານ້ອຍກໍບໍ່ໄດ້ເຊື່ອງໄວ້
ຈາກພຣະອົງ10ໃຈຂອງຂ້ານ້ອຍກໍເຕັ້ນຢ່າງຮຸ່ນແຮງກຳລັງຂອງຂ້ານ້ອຍກໍອິດເມື່ອຍ ແລະສາຍຕາຂອງຂ້ານ້ອຍກໍສູນເສຍຄວາມສະຫວ່າງ.
11ຫມູ່ເພື່ອນແລະເພື່ອນບ້ານຂອງຂ້ານ້ອຍກໍພາກັນຫລົບລີກຂ້ານ້ອຍເພາະສະພາບຂອງຂ້ານ້ອຍ ເພື່ອນບ້ານຂອງຂ້ານ້ອຍກໍຢືນຢູ່ແຕ່ຫ່າງໆ12ບັນ
ດາຜູ້ທີ່ສະແຫວງຫາເອົາຊີວິດຂອງຂ້ານ້ອຍກໍວາງບ້ວງດັກຂ້ານ້ອຍ. ພວກທີ່ຫາທາງທຳຮ້າຍຂ້ານ້ອຍກໍເວົ້າຖ້ອຍຄຳຂູ່ເຂັ່ນ ແລະກ່າວຄຳຫລອກ
ລວງຕະຫລອດວັນຍັງຄ່ຳ
13ແຕ່, ຂ້ານ້ອຍເປັນເຫມືອນຄົນຫູຫນວກແລະບໍ່ໄດ້ຍິນຫຍັງເລີຍ; ຂ້ານ້ອຍເປັນເຫມືອນຄົນໃບ້ທີ່ເວົ້າບໍ່ໄດ້.14ຂ້ານ້ອຍເປັນເຫມືອນຄົນທີ່ບໍ່ໄດ້ຍິນ
ແລະຄືຄົນທີ່ຕອບບໍ່ໄດ້ ຂ້າແດ່ພຣະຢາເວ.
15ຂ້າແດ່ພຣະຢາເວ ຂ້ານ້ອຍລໍຄອຍພຣະອົງ; ພຣະອົງຈະຊົງຕອບຂ້ານ້ອຍ, ຂ້າແດ່ອົງພຣະຜູ້ເປັນເຈົ້າຜູ້ຊົງເປັນພຣະເຈົ້າຂອງຂ້ານ້ອຍ.16ຂ້າ
ນ້ອຍເວົ້າແບບນີ້ເພື່ອທີ່ສັດຕຣູທັງຫລາຍຂອງຂ້ານ້ອຍຈະບໍ່ໄດ້ເຢາະເຍີ້ຍຂ້ານ້ອຍ. ຖ້າຕີນຂອງຂ້ານ້ອຍມື່ນໄຫລ, ພວກເຂົາຈະເຮັດສິ່ງທີ່ຫນ້າ
ຢ້ານແກ່ຂ້ານ້ອຍ.
17ເພາະຂ້ານ້ອຍເກືອບຈະລົ້ມລົງແລ້ວ, ແລະຂ້ານ້ອຍເຈັບປວດຢູ່ຕະຫລອດເວລາ.18ຂ້ານ້ອຍສາຣະພາບຄວາມຜິດຂອງຂ້ານ້ອຍ; ຂ້ານ້ອຍທຸກໃຈ
ໃນເລື່ອງບາບຂອງຂ້ານ້ອຍ.
19ແຕ່ສັດຕຣູຂອງຂ້ານ້ອຍມີຈຳນວນຫລວງຫລາຍ; ບັນດາຜູ້ທີ່ກຽດຊັງຂ້ານ້ອຍຢ່າງຜິດໆ ກໍມີຫລວງຫລາຍ.20ພວກເຂົາຕອບແທນຄວາມດີຂອງ
ຂ້ານ້ອຍດ້ວຍຄວາມຊົ່ວ; ພວກເຂົາລຸມກ່າວໂທດຂ້ານ້ອຍແມ່ນວ່າຂ້ານ້ອຍຕິດຕາມແຕ່ສິ່ງທີ່ດີ.
21ຂໍຢ່າຊົງຖິ້ມຂ້ານ້ອຍ, ຂ້າແດ່ພຣະຢາເວ; ພຣະເຈົ້າຂອງຂ້ານ້ອຍ, ຂໍຢ່າສະຖິດຫ່າງໄກຈາກຂ້ານ້ອຍ.22ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຜູ້ຊົງເປັນ
ຄວາມພົ້ນຂອງຂ້ານ້ອຍ, ຂໍມາຊ່ວຍຂ້ານ້ອຍໂດຍໄວເຖີດ.


generated on Tue Jun 17 19:01:42 2025

39 ເຖິງຄະນະດົນຕຣີ, ສຳຫລັບ ເຈດູທັນ. ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍໄດ້ຕັດສິນໃຈວ່າ, "ຂ້ານ້ອຍຈະເຝົ້າຣະວັງສິ່ງທີ່ຂ້ານ້ອຍ
ເວົ້າເພື່ອຂ້ານ້ອຍຈະບໍ່ເຮັດບາບດ້ວຍລີ້ນຂອງຂ້ານ້ອຍ. ຂ້ານ້ອຍຈະປິດປາກຂອງຂ້ານ້ອຍໄວ້ໃນຂະນະທີ່ຢູ່ຕໍ່ຫນ້າຄົນຊົ່ວ."

[2]ຂ້ານ້ອຍມິດງຽບ; ຂ້ານ້ອຍເກັບຄຳເວົ້າຂອງຂ້ານ້ອຍໄວ້ ແມ່ນຈະເວົ້າຫຍັງທີ່ດີກໍ່ຕາມ, ແລະຄວາມເຈັບປວດຂອງຂ້ານ້ອຍກໍ່ຍິ່ງຫນັກຂຶ້ນ.[3]ໃຈ
ຂອງຂ້ານ້ອຍກໍ່ຮ້ອນຢູ່; ເມື່ອຂ້ານ້ອຍຄິດເຖິງເລື່ອງເຫລົ່ານີ້, ມັນໄຫມ້ດັ່ງເຊັ່ນໄຟ ແລ້ວໃນທີ່ສຸດຂ້ານ້ອຍກໍ່ເວົ້າວ່າ.
[4]ຂ້າແດ່ພຣະຢາເວ, ຂໍຊົງໂຜດໃຫ້ຂ້ານ້ອຍຮູ້ວ່າເມື່ອໃດຈະເຖິງບັ້ນປາຍຊີວິດຂອງຂ້ານ້ອຍແລະເວລາຂອງຂ້ານ້ອຍເຫລືອຢູ່ເທົ່າໃດ. ຂໍຊົງສຳ
ແດງໃຫ້ຮູ້ວ່າຊີວິດຂອງຂ້ານ້ອຍນັ້ນສັ້ນຂະຫນາດໃດ.[5]ເບິ່ງແມ, ພຣະອົງໄດ້ຊົງໃຫ້ວັນເວລາຂອງຂ້ານ້ອຍຍາວພຽງແຄ່ຝາມືຂອງຂ້ານ້ອຍ, ແລະ
ຕະຫລອດຊີວິດຂອງຂ້ານ້ອຍກໍໄຮ້ຄ່າສະເພາະຫນ້າພຣະອົງ. ມະນຸດທຸກຄົນຢູ່ໄດ້ພຽງແຄ່ລົມຫາຍໃຈດຽວ. ເສລາ
[6]ແນ່ນອນ ມະນຸດທຸກຄົນເດີນໄປມາດັ່ງເຊັ່ນເງົາ. ທຸກຄົນເລັ່ງຮີບໃນການສະສົມຄວາມລ້ຳລວຍແມ່ນພວກເຂົາບໍ່ຮູ້ວ່າໃຜຈະມາຮັບຄວາມລ້ຳລວຍ
ນັ້ນຕໍ່ໄປ.[7]ບັດນີ້, ຂ້າແດ່ພຣະຜູ້ເປັນເຈົ້າ, ຂ້ານ້ອຍລໍຖ້າຫຍັງ? ພຣະອົງຊົງເປັນຄວາມຫວັງດຽວຂອງຂ້ານ້ອຍ.
[8]ຂໍຊົງຊ່ວຍກູ້ຂ້ານ້ອຍຈາກບາບທັງຫລາຍຂອງຂ້ານ້ອຍ; ຂໍຢ່າໃຫ້ຂ້ານ້ອຍຖືກຄົນໂງ່ຫົວເຢາະເຢີ້ຍ.[9]ຂ້ານ້ອຍມິດງຽບຢູ່ແລະບໍ່ສາມາດເປີດປາກ
ຂອງຂ້ານ້ອຍອອກໄດ້, ເພາະວ່າພຣະອົງເອງໄດ້ຊົງເປັນຜູ້ກະທຳເຊັ່ນນັ້ນ.
[10]ຂໍຢ່າຊົງເຮັດໃຫ້ຂ້ານ້ອຍບາດເຈັບເລີຍ; ຂ້ານ້ອຍຈົມຢູ່ໃນຄວາມອັນຕະຣາຍແຫ່ງມືຂອງພຣະອົງ.[11]ເມື່ອພຣະອົງຊົງຕີສອນບັນດາປະຊາກອນ
ເພາະຄວາມບາບ, ພຣະອົງຊົງກິນສິ່ງທີ່ພວກເຂົາປຣາຖນາໄປຄືແມງມັນແມງເມົ້າ; ປະຊາກອນທັງຫມົດນັ້ນໄຮ້ຄ່າເປັນແຕ່ພຽງໄອນ້ຳ. ເສລາ
[12]ຂໍຊົງຟັງຄຳອະທິຖານຂອງຂ້ານ້ອຍ, ຂ້າແດ່ພຣະຢາເວ, ແລະຊົງຟັງຂ້ານ້ອຍ, ຂໍຊົງຟັງສຽງຮ້ອງໃຫ້ຂອງຂ້ານ້ອຍຂໍຢ່າຊົງເສີຍຕໍ່ຂ້ານ້ອຍ!
ເພາະຂ້ານ້ອຍເປັນຄືຄົນຕ່າງດ້າວສຳລັບພຣະອົງ, ເປັນຜູ້ລີ້ໄພຄືເຊັ່ນບັນດາເຊື້ອສາຍທັງປວງຂອງຂ້ານ້ອຍເຄີຍເປັນ.[13]ຂໍຢ່າຊົງຈ້ອງເບິ່ງຂ້ານ້ອຍ
ເພື່ອຂ້ານ້ອຍຈະໄດ້ຍິ້ມອີກຄັ້ງ ກ່ອນທີ່ຂ້ານ້ອຍຈະຈາກໄປ."

 generated on Tue Jun 17 19:01:42 2025

40 ເຖິງຄະນະນັກຮ້ອງ. ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍໄດ້ພຽງລໍຄອຍພຣະຢາເວ; ພຣະອົງຊົງຟັງຂ້ານ້ອຍແລະຊົງໄດ້ຍິນສຽງຮ້ອງ
ຂອງຂ້ານ້ອຍ.[2]ພຣະອົງຊົງນຳຂ້ານ້ອຍຂຶ້ນມາຈາກຂຸມອັນຕະຣາຍ ອອກຈາກຂີ້ຕົມ, ແລະຊົງວາງຕີນຂອງຂ້ານ້ອຍໄວ້ເທິງໂງ່ນຫີນ, ແລະ
ເຮັດໃຫ້ບາດກ້າວຂອງນ້ອຍຫມັ້ນຄົງ.

[3]ພຣະອົງໄດ້ສອນບົດເພງໃຫມ່ໄວ້ໃນປາກຂອງຂ້ານ້ອຍ, ສັນຣະເສີນແດ່ພຣະເຈົ້າຂອງເຮົາທັງຫລາຍ, ຄົນເປັນແບບນີ້ຈະເຫັນແລະ
ຖວາຍກຽດຕິຍົດແດ່ພຣະອົງ ແລະຈະໄວ້ວາງໃຈໃນພຣະຢາເວ.[4]ຄວາມສຸກເປັນຂອງຜູ້ທີ່ໄວ້ວາງໃຈໃນພຣະຢາເວແລະບໍ່ຍົກຍ້ອງຄົນຍິ່ງຈອງ
ຫອງຫລືບັນດາຜູ້ທີ່ຫັນຫນີຈາກພຣະອົງໄປຫາຄວາມບໍ່ຈິງ.
[5]ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ພຣະອົງໄດ້ເຮັດອັສະຈັນຢ່າງຫລວງຫລາຍ, ແລະດຳຣິຂອງພຣະອົງຊຶ່ງເກີນກວ່າທີ່ຂ້ານ້ອຍທັງ
ຫລາຍຈະນັບໄດ້; ຖ້າຂ້ານ້ອຍຈະປະກາດແລະກ່າວເຖິງສິ່ງເຫລົ່ານັ້ນ ກໍຄົງມີຫລາຍເກີນກວ່າທີ່ຈະນັບໄດ້.[6]ພຣະອົງບໍ່ຊົງຍິນດີໃນສັດຖວາຍບູຊາ
ແລະເຄື່ອງບູຊາ, ແຕ່ພຣະອົງໄດ້ຊົງເປີດຫູຂອງຂ້ານ້ອຍ; ຂ້ານ້ອຍບໍ່ຊົງປະສົງເຄື່ອງເຜົາບູຊາຫລືເຄື່ອງບູຊາລົບລ້າງບາບ.
[7]ແລ້ວຂ້ານ້ອຍທູນວ່າ, "ເບິ່ງແມ້, ຂ້ານ້ອຍມາແລ້ວ; ພຣະເຈົ້າຂ້າ ມີຂໍ້ຂຽນກ່ຽວກັບຂ້ານ້ອຍໃນຫນັງສືກົດບັນຍັດ ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ.
[8]ຂ້ານ້ອຍປິຕິຍິນດີທີ່ຈະເຮັດຕາມພຣະປະສົງຂອງພຣະອົງ, ພຣະເຈົ້າຂອງຂ້ານ້ອຍ, ຮັກສາຄຳສອນຂອງພຣະອົງຢູ່ໃນໃຈຂອງຂ້ານ້ອຍ."[9]ຂ້າ
ນ້ອຍໄດ້ປະກາດຂ່າວດີແຫ່ງຄວາມຊອບທັມຂອງພຣະອົງໃນທີ່ຊຸມນຸມໃຫຍ່; ຂ້າແດ່ພຣະຢາເວ, ພຣະອົງຊົງຮູ້ວ່າຣີມສົບປາກຂອງຂ້ານ້ອຍບໍ່ໄດ້
ຢຸດຢັ້ງທີ່ຈະປະກາດເລີຍ.
[10]ຂ້ານ້ອຍບໍ່ໄດ້ປິດບັງຄວາມຊອບທັມຂອງພຣະອົງໄວ້ພຽງແຕ່ໃນໃຈຂອງຂ້ານ້ອຍ; ຂ້ານ້ອຍໄດ້ປະກາດຄວາມຊອບທັມຂອງພຣະອົງແລະຄວາມ
ພົ້ນຂອງພຣະອົງ; ຂ້ານ້ອຍບໍ່ໄດ້ປົກປິດຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ຫລືຄວາມຈິງຂອງພຣະອົງໄວ້ຈາກທີ່ຊຸມນຸມໃຫຍ່ເລີຍ.[11]ຂໍຢ່າ
ຊົງຢ່າຢຸດຄວາມຕັ້ງໃຈຂອງພຣະອົງໄປຈາກຂ້ານ້ອຍ, ຂ້າແດ່ພຣະຢາເວ, ຂໍໃຫ້ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງແລະຄວາມຈິງຂອງພ
ຣະອົງຄຸ້ມຄອງຮັກສາຂ້ານ້ອຍຢູ່ສະເຫມີ.
[12]ຄວາມຍາກລຳບາກອັນນັບບໍ່ຖ້ວນໄດ້ລ້ອມຂ້ານ້ອຍ; ຄວາມຜິດບາບຂອງຂ້ານ້ອຍ ໄດ້ຕາມທັນຂ້ານ້ອຍ ເຮັດໃຫ້ຂ້ານ້ອຍບໍ່ສາມາດເບິ່ງເຫັນຫ
ຍັງໄດ້; ມັນມີຫລາຍກວ່າເສັ້ນຜົມເທິງຫົວຂອງຂ້ານ້ອຍ, ແລະໃຈຂອງຂ້ານ້ອຍກໍຫົດຫູ່.[13]ຂໍພຣະອົງຊົງໂຜດ, ຂ້າແດ່ພຣະຢາເວ, ຂໍຊົງຊ່ວຍກູ້ຂ້າ
ນ້ອຍ, ຂໍຊົງຊ່ວຍເຫລືອຂ້ານ້ອຍ; ຂ້າແດ່ພຣະຢາເວ.
[14]ຂໍຊົງຮີບມາຊ່ວຍຂ້ານ້ອຍດ້ວຍເຖີດ ຂໍໃຫ້ພວກເຂົາໄດ້ຮັບຄວາມອັບອາຍ. ແລະຂໍໃຫ້ຜູ້ທີ່ໄລ່ລ້າເພື່ອເອົາຊີວິດຂອງຂ້ານ້ອຍໄດ້ຫມົດຫວັງຂໍ
ໃຫ້,ບັນດາຜູ້ທີ່ຍິນດີໃນການທຳຮ້າຍຂ້ານ້ອຍໄດ້ຫັນກັບໄປແລະໄດ້ຮັບຄວາມອັບອາຍ.[15]"ຫັ້ນເດ, ຫັ້ນເດ!"
[16]ແຕ່ຂໍໃຫ້ບັນດາຜູ້ທີ່ສະແຫວງຫາພຣະອົງປິຕິຍິນດີແລະຊື່ນຊົມຍິນດີໃນພຣະອົງ; ໃຫ້ທຸກຄົນທີ່ຮັກຄວາມພົ້ນຂອງພຣະອົງກ່າວຢູ່ສະເຫມີວ່າ,
"ຂໍໃຫ້ພຣະຢາເວເປັນທີ່ສັນຣະເສີນ."[17]ຂ້ານ້ອຍຍາກຈົນແລະຂັດສົນ; ແຕ່ອົງພຣະຜູ້ເປັນເຈົ້າຊົງຣະນຶກເຖິງຂ້ານ້ອຍ. ພຣະອົງຊົງເປັນຄວາມ
ຊ່ວຍເຫລືອຂອງຂ້ານ້ອຍ; ແລະພຣະອົງມາເພື່ອເປັນຜູ້ຊ່ວຍກູ້ຂອງຂ້ານ້ອຍ; ຂໍຢ່າຊົງລໍຊ້າ, ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ.

41 [1]ຜູ້ໃດທີ່ເອົາໃຈໃສ່ຄົນອ່ອນແອໃນຍາມຍາກລໍາບາກກໍເປັນສຸກ ພຣະຢາເວຈະຊົງຊ່ວຍເຫລືອເຂົາ[2]ພຣະຢາເວຈະຊົງເກັບເຂົາໄວ້ແລະຊົງຮັກ
ສາຊີວິດຂອງເຂົາ ແລະເຂົາຈະໄດ້ຮັບພຣະພອນເທິງແຜ່ນດິນໂລກ ພຣະຢາເວຈະບໍ່ຊົງມອບເຂົາໃຫ້ໄປຕາມໃຈມັກຂອງພວກສັດຕຣູຂອງ
ເຂົາ[3]ພຣະຢາເວຈະຊົງອູ້ມຊູເມື່ອເຂົາຢູ່ເທິງຕຽງແຫ່ງການທົນທຸກ ພຣະອົງຊົງເຮັດໃຫ້ຕຽງແຫ່ງຄວາມເຈັບປ່ວຍກາຍເປັນຕຽງແຫ່ງການຮັກສາ

[4]ຂ້ານ້ອຍທູນວ່າ, "ຂ້າແດ່ພຣະຢາເວ, ຂໍຊົງເມດຕາຂ້ານ້ອຍດ້ວຍເຖີດ! ຂໍຊົງຮັກສາຂ້ານ້ອຍໃຫ້ຫາຍ, ເພາະຂ້ານ້ອຍໄດ້ເຮັດບາບຕໍ່ພຣະ
ອົງ."[5]ພວກສັດຕຣູຂອງຂ້ານ້ອຍເວົ້າບໍ່ດີໃສ່ຂ້ານ້ອຍວ່າ, ເວົ້າວ່າ,'ເມື່ອໃດເຂົາຈະຕາຍແລະຊື່ຂອງເຂົາຈະຖືກລືມໄລໄປ?'[6]ຖ້າສັດຕຣູຂອງຂ້ານ້ອຍ
ມາເຫັນຂ້ານ້ອຍ, ເຂົາເວົ້າສິ່ງໄຮ້ສາລະ; ໃຈຂອງເຂົາເກັບເລື່ອງຄວາມພິນາດຂອງຂ້ານ້ອຍໄວ້; ພໍເມື່ອເຂົາໄປຈາກຂ້ານ້ອຍ, ເຂົາກໍເລົ່າເລື່ອງນັ້ນ
ໃຫ້ຄົນອື່ນຟັງ.
[7]ຜູ້ທີ່ກຽດຊັງຂ້ານ້ອຍທັງຫມົດກໍຊຸບຊິບກັນເລື່ອງຂ້ານ້ອຍ; ພວກເຂົາຕໍ່ຕ້ານຂ້ານ້ອຍເພື່ອຫວັງໃຫ້ຂ້ານ້ອຍເຈັບປວດ.[8]ພວກເຂົາກ່າວວ່າ, "ເຊື້ອ
ແຫ່ງຄວາມຊົ່ວໄດ້ຝັງແຫນ້ນຢູ່ໃນເຂົາ, ບັດນີ້ເຂົາກໍາລັງນອນລົງ ແລ້ວເຂົາຈະບໍ່ໄດ້ລຸກຂຶ້ນອີກຕໍ່ໄປ."[9]ເຖິງປານນັ້ນ, ແມ່ນແຕ່ເພື່ອນສະນິດຂອງ
ຂ້ານ້ອຍ, ຜູ້ທີ່ຂ້ານ້ອຍໄວ້ໃຈຜູ້ທີ່ໄດ້ກິນອາຫານຂອງຂ້ານ້ອຍ, ກໍໄດ້ສູ້ຂ້ານ້ອຍ ຂ້າແດ່ພຣະຢາເວ.
[10]ແຕ່ພຣະອົງ, ພຣະຢາເວ, ຂໍຊົງເມດຕາຕໍ່ຂ້ານ້ອຍແລະຊົງຍົກຂ້ານ້ອຍຂຶ້ນ ເພື່ອຂ້ານ້ອຍຈະໄດ້ຕອບໂຕ້ພວກເຂົາ.[11]ເພາະນີ້ເຮັດໃຫ້ຂ້ານ້ອຍຮູ້
ວ່າພຣະອົງຊົງພໍໃຈໃນຂ້ານ້ອຍ, ເພາະສັດຕຣູຂອງຂ້ານ້ອຍບໍ່ໄດ້ມີຊັຍຊະນະເຫນືອຂ້ານ້ອຍ.[12]ສໍາລັບຂ້ານ້ອຍແລ້ວ, ພຣະອົງຊົງອຸ້ມຊູຂ້ານ້ອຍ
ເພາະຄວາມຊື່ສັດສຸດຈະຣິດຂອງຂ້ານ້ອຍ ແລະຈະຊົງຮັກສາຂ້ານ້ອຍໄວ້ຕໍ່ເບື້ອງຫນ້າຂອງພຣະອົງຕະຫລອດໄປເປັນນິດ.
[13]ຂໍໃຫ້ພຣະຢາເວ, ພຣະເຈົ້າແຫ່ງອິສະຣາເອນໄດ້ຮັບການສັນຣະເສີນຈາກນິຣັນການຈົນເຖິງນິຣັນການ. ອາແມນແລະອາແມນ. ປື້ມຫົວທີ2

 generated on Tue Jun 17 19:01:42 2025

42 ເຖິງຄະນະນັກຮ້ອງ. ມາກຊິວ ລູກຊາຍຂອງໂຄລັດ.[1]ດັ່ງກວາງກະເສືອກກະສົນຫາລຳນ້ຳ, ຂ້ານ້ອຍກໍກະຫາຍຫາພຣະອົງນັ້ນ, ຂ້າແດ່ພຣະ
ເຈົ້າ.[2]ຂ້ານ້ອຍກະຫາຍຫາພຣະເຈົ້າ, ກະຫາຍຫາພຣະເຈົ້າຜູ້ຊົງມີຊີວິດຢູ່, ເມື່ອໃດທີ່ຂ້ານ້ອຍຈະໄດ້ມາຢູ່ຕໍ່ເບື້ອງພຣະພັກຂອງພຣະເຈົ້າ?

[3]ນ້ຳຕາຂອງຂ້ານ້ອຍໄຫລຖ້ວມທັງເວັນທັງຄືນ ໃນຂະນະທີ່ພວກສັດຕູຂອງຂ້ານ້ອຍພາກັນເວົ້າວ່າ "ພຣະເຈົ້າຂອງເຈົ້າຢູ່ໃສ?"[4]ຂ້ານ້ອຍຣະນຶກ
ເຖິງສິ່ງເຫລົ່ານີ້ເມື່ອຂ້ານ້ອຍລະບາຍຄວາມໃນໃຈອອກມາ ຕອນທີ່ຂ້ານ້ອຍໄປກັບຝູງຊົນຫລວງຫລາຍແລະນຳພວກເຂົາໄປຍັງພຣະວິຫານຂອງ
ພຣະເຈົ້າດ້ວຍສຽງແຫ່ງຄວາມຍິນດີແລະສຽງສັນຣະເສີນຝູງຊົນພາກັນສະເຫລີມສະຫລອງເທສະການ.
[5]ຈິດໃຈຂອງຂ້າເອີຍ, ເປັນຫຍັງເຈົ້າຈຶ່ງທໍ້ຖອຍ? ເປັນຫຍັງເຈົ້າຈຶ່ງບໍ່ພໍໃຈຢູ່ພາຍໃນຂ້າ? ຈົ່ງຫວັງໃນພຣະເຈົ້າ, ເພາະຂ້ານ້ອຍຈະສັນຣະເສີນພຣະ
ອົງຜູ້ຊົງເປັນຄວາມພົ້ນຂອງຂ້ານ້ອຍອີກຄັ້ງ.[6]ຂ້າແດ່ພຣະເຈົ້າ, ຈິດໃຈຂອງຂ້ານ້ອຍກໍທໍ້ຖອຍຢູ່ພາຍໃນຂ້ານ້ອຍ, ເພາະສະນັ້ນຂ້ານ້ອຍຈຶ່ງຣະນຶກ
ເຖິງພຣະອົງຈາກດິນແດນແຫ່ງແມ່ນ້ຳຈໍແດນ, ຈາກຍອດເຂົາທັງສາມແຫ່ງພູເຂົາເຮີໂມນ ແລະຈາກເນີນພູມີຊາ.
[7]ທີ່ເລິກຮ້ອງຫາທີ່ເລິກດ້ວຍສຽງຂອງນ້ຳຕົກຂອງພຣະອົງ; ຄື້ນຂອງ ພຣະອົງໄດ້ຖ້ວມຂ້ານ້ອຍແລ້ວ.[8]ແຕ່ພຣະຢາເວຍັງຈະຊົງບັນຊາຄວາມຊື່ສັດ
ແຫ່ງຄຳສັນຍາຂອງພຣະອົງໃນຍາມກາງເວັນ; ບົດເພງຂອງພຣະອົງຈະຢູ່ກັບຂ້ານ້ອຍໃນຍາມກາງຄືນ ເປັນຄຳອະທິຖານແດ່ພຣະເຈົ້າແຫ່ງຊີວິດ
ຂອງຂ້ານ້ອຍ.
[9]ຂ້ານ້ອຍຈະທູນຕໍ່ພຣະເຈົ້າ, ອົງເປັນສີລາຂອງຂ້ານ້ອຍວ່າ, "ເປັນຫຍັງນໍ ພຣະອົງຊົງລືມຂ້ານ້ອຍເສຍ? ເປັນຫຍັງນໍ ຂ້ານ້ອຍຈຶ່ງທຸກໂສກເພາະ
ການຂົ່ມເຫັງຂອງສັດຕຣູ?"[10]ພວກສັດຕຣູຂອງຂ້ານ້ອຍກໍທັບຖົມຂ້ານ້ອຍ ເຫມືອນດັ່ງດາບທີ່ຢູ່ໃນກະດູກຂອງຂ້ານ້ອຍ, ເມື່ອພວກເຂົາເວົ້າກັບຂ້າ
ນ້ອຍສະເຫມີວ່າ, "ພຣະເຈົ້າຂອງເຈົ້າຢູ່ທີ່ໃດ?"
[11]ເປັນຫຍັງເຈົ້າເຖິງທໍ້ຖອຍ, ຈິດໃຈຂອງຂ້າເອີຍ? ເປັນຫຍັງເຈົ້າບໍ່ພໍໃຈຢູ່ພາຍໃນຂ້າ? ຈົ່ງຫວັງໃນພຣະເຈົ້າ, ເພາະຂ້ານ້ອຍຈະສັນຣະເສີນພຣະ
ອົງຜູ້ຊົງເປັນຄວາມພົ້ນແລະຊົງເປັນພຣະເຈົ້າຂອງຂ້ານ້ອຍອີກຄັ້ງ.

 generated on Tue Jun 17 19:01:42 2025

43 [1]ຂ້າແດ່ພຣະເຈົ້າ ຂໍປຣະທານຄວາມຍຸຕິທັມແກ່ຂ້ານ້ອຍ ແລະຂໍຊົງສູ້ຄະດີຂອງຂ້ານ້ອຍກັບພວກຊົນຊາດອະທັມ[2]ເພາະພຣະອົງຊົງເປັນພ
ຣະເຈົ້າແຫ່ງກຳລັງຂອງຂ້ານ້ອຍ ພຣະອົງຊົງປະຕິເສດຂ້ານ້ອຍ? ຂ້ານ້ອຍຢູ່ໃນຄວາມທຸກໂສກເພາະການຂົ່ມເຫັງຂອງສັດຕຣູ?

[3]ຂໍຊົງສົ່ງຄວາມສະຫວ່າງແລະຄວາມຈິງຂອງພຣະອົງມາ ໃຫ້ທັງສອງນຳຂ້ານ້ອຍ ໃຫ້ທັງສອງນຳຂ້ານ້ອຍໄປສູ່ພູເຂົາສັກສິດຂອງພຣະອົງແລະ
ໄປເຖິງທີ່ຢູ່ຂອງພຣະອົງ[4]ແລ້ວຂ້ານ້ອຍຈະໄປຍັງແທ່ນບູຊາຂອງພຣະເຈົ້າ ໄປຍັງພຣະເຈົ້າຜູ້ຊົງເປັນຄວາມຊື່ນຊົມຍິນດີຢ່າງເຫລືອລົ້ນຂອງຂ້າ
ນ້ອຍ ຂ້າແດ່ພຣະຈົ້າ ພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍຈະສັນຣະເສີນພຣະອົງດ້ວຍພິນເຂົາຄູ່
[5]ຈິດໃຈຂອງຂ້າເອີຍ ເປັນຫຍັງເຈົ້າຈຶ່ງທໍ້ດທູ່? ເປັນຫຍັງເຈົ້າບໍ່ພໍໃຈຢູ່ຂ້າງໃນຂ້າ? ຈົ່ງຫວັງໃນພຣະເຈົ້າ ຂ້ານ້ອຍຈະສັນຣະເສີນພຣະອົງຜູ້ຊົງ
ເປັນຄວາມລອດແລະຊົງເປັນພຣະເຈົ້າຂອງຂ້ານ້ອຍອີກຄັ້ງ

 generated on Tue Jun 17 19:01:42 2025

44 [1]ສໍາຫລັບຄະນະນັກຮ້ອງ. ເພງສັນຣະເສີນລູກຊາຍຂອງໂຄລັດ. ຂ້ານ້ອຍທັງຫລາຍໄດ້ຍິນກັບຫູ, ຂ້າແດ່ພຣະເຈົ້າ, ບັນພະບຸຣຸດຂອງຂ້າ
ນ້ອຍທັງຫລາຍໄດ້ບອກເລົ່າເຖິງການທີ່ພຣະອົງຊົງກະທໍາໃນສມັຍຂອງພວກເຂົາ, ໃນສມັຍບູຮານນັ້ນ.[2]ພຣະອົງໄດ້ຊົງໄລ່ຊົນຊາດຕ່າງໆ
ອອກໄປດ້ວຍມືຂອງພຣະອົງ, ແຕ່ພຣະອົງໄດ້ຊົງໃຫ້ປະຊາຊົນຂອງຂ້ານ້ອຍທັງຫລາຍໄວ້ ພຣະອົງໄດ້ຊົງເຮັດໃຫ້ປະຊາຊົນນັ້ນທຸກໃຈ, ແຕ່ພຣະ
ອົງຊົງກະຈາຍປະຊາຊົນຂອງຂ້ານ້ອຍທັງຫລາຍອອກໄປໃນແຜ່ນດິນ.

[3]ເພາະພວກເຂົາບໍ່ໄດ້ຮັບແຜ່ນດິນເປັນກໍາມະສິດຂອງຕົນເອງໄດ້ ໂດຍດາບຂອງພວກເຂົາເອງ. ແລະແຂນຂອງພວກເຂົາກໍຊ່ວຍພວກເຂົາໄວ້ບໍ່ໄດ້
ແຕ່ໂດຍພຣະຫັດຂວາຂອງພຣະອົງ ແລະຫູຂອງພຣະອົງ ແລະໂດຍຄວາມສະຫວ່າງແຫ່ງພຣະພັກຂອງພຣະອົງ ເພາະພຣະອົງໄດ້ຊົງພໍໃຈໃນ
ພວກເຂົາ[4]ຂ້າແດ່ພຣະເຈົ້າ ພຣະອົງຊົງເປັນກະສັດຂອງຂ້ານ້ອຍ ຂໍຊົງມອບຊັຍຊະນະໃຫ້ແກ່ຢາໂຄບດ້ວຍເຖີດ
[5]ຂ້ານ້ອຍທັງຫລາຍຈະຍູ້ສັດຕຣູລົ້ມລົງໄດ້ໂດຍພຣະອົງ; ຂ້ານ້ອຍທັງຫລາຍຈະຢຽບບັນດາຜູ້ທີ່ລຸກຂຶ້ນສູ້ໄດ້ໂດຍພຣະນາມຊື່ຂອງພຣະອົງ.[6]ເພາະ
ຂ້ານ້ອຍຈະບໍ່ວາງໃຈໃນຄັນທະນູຂອງຂ້ານ້ອຍ, ແລະດາບຂອງຂ້ານ້ອຍກໍຊ່ວຍຂ້ານ້ອຍໃຫ້ລອດບໍ່ໄດ້.
[7]ແຕ່ພຣະອົງໄດ້ຊົງຊ່ວຍຂ້ານ້ອຍທັງຫລາຍໃຫ້ພົ້ນຈາກພວກສັດຕຣູຂອງຂ້ານ້ອຍທັງຫລາຍ, ແລະຊົງເຮັດໃຫ້ຄົນທີ່ກຽດຊັງຂ້ານ້ອຍທັງຫລາຍ
ໄດ້ອັບອາຍ.[8]ຂ້ານ້ອຍທັງຫລາຍໄດ້ອວດເຖິງພຣະເຈົ້າຕະຫລອດວັນຍັງຄໍ່າ, ແລ້ວຂ້ານ້ອຍທັງຫລາຍຈະຖວາຍສັນຣະເສີນແດ່ພຣະນາມຊື່ຂອງພ
ຣະອົງຕະຫລອດໄປເປັນນິດ. ເສລາ
[9]ແຕ່ບັດນີ້ ພຣະອົງໄດ້ຊົງຖິ້ມຂ້ານ້ອຍທັງຫລາຍແລະນໍາຄວາມພ່າຍແພ້ມາສູ່ຂ້ານ້ອຍທັງຫລາຍ, ແລະພຣະອົງບໍ່ໄດ້ອອກໄປກັບກອງທັບຂອງຂ້າ
ນ້ອຍທັງຫລາຍ.[10]ພຣະອົງຊົງເຮັດໃຫ້ຂ້ານ້ອຍທັງຫລາຍຫັນໜີຈາກສັດຕຣູ; ແລະບັນດາຜູ້ທີ່ກຽດຊັງຂ້ານ້ອຍທັງຫລາຍກໍໄດ້ຢຶດຂອງຮິບໄປ.
[11]ພຣະອົງຊົງເຮັດໃຫ້ຂ້ານ້ອຍທັງຫລາຍເປັນຄືແກະທີ່ຖືກໃຊ້ເພື່ອເປັນອາຫານ ແລະຊົງກະແຈກກະຈາຍຂ້ານ້ອຍທັງຫລາຍໄປທ່າມກາງຊົນຊາດ
ຕ່າງໆ.
[12]ພຣະອົງໄດ້ຂາຍປະຊາກອນຂອງພຣະອົງໂດຍເປົ່າໆ; ພຣະອົງບໍ່ໄດ້ຊົງເພີ່ມຄວາມຮັ່ງມີຂອງພຣະອົງຂຶ້ນໃນການກະທໍາເຊັ່ນນີ້.[13]ພຣະອົງເຮັດ
ໃຫ້ຂ້ານ້ອຍທັງຫລາຍເປັນທີ່ເຢາະເຢີ້ຍຂອງເພື່ອນບ້ານເປັນທີ່ຫົວຂວັນ, ແລ້ວເຢີ້ຍຫຍັນຈາກບັນດາຄົນທີ່ຢູ່ລ້ອມຮອບຂ້ານ້ອຍທັງຫລາຍ.[14]ພຣະ
ອົງຊົງເຮັດໃຫ້ຂ້ານ້ອຍທັງຫລາຍກາຍເປັນທີ່ດູຫມິ່ນໃນທ່າມກາງຊົນຊາດຕ່າງໆ, ປະຊາຊົນທັງຫລາຍກໍພາກັນແກ່ງຫົວໃສ່ຂ້ານ້ອຍ.
[15]ຄວາມພາຍແພ້ຂອງຂ້ານ້ອຍຢູ່ຕໍ່ຫນ້າຂ້ານ້ອຍຕະຫລອດວັນຍັງຄໍ່າ, ແລະຄວາມອັບອາຍຂາຍຫນ້າກໍປົກຄຸມຂ້ານ້ອຍໄວ້[16]ເນື່ອງດ້ວຍສຽງຂອງ
ຄົນທີ່ເຢາະເຢີ້ຍແລະດູຫມິ່ນ, ເນື່ອງດ້ວຍສັດຕຣູແລະຜູ້ແກ້ແຄ້ນ.[17]ທັງຫມົດນີ້ຈຶ່ງໄດ້ຕົກມາຍັງຂ້ານ້ອຍທັງຫລາຍ; ແຕ່ຂ້ານ້ອຍທັງຫລາຍກໍບໍ່ລືມ
ພຣະອົງ ຫລືເຮັດຜິດຕໍ່ຄໍາສັນຍາຂອງພຣະອົງ.
[18]ໃຈຂອງຂ້ານ້ອຍທັງຫລາຍບໍ່ໄດ້ຫັນກັບ; ກ້າວເດີນຂອງຂ້ານ້ອຍທັງຫລາຍບໍ່ໄດ້ໄປຈາກທາງທີ່ພຣະອົງຂີດໄວ້.[19]ແຕ່ພຣະອົງຍັງຊົງທຸບພວກຂ້າ
ນ້ອຍທັງຫລາຍໃຫ້ແຕກໃນທີ່ຂອງພວກຫມາປ່າ ແລະປົກຄຸມຂ້ານ້ອຍທັງຫລາຍດ້ວຍເງົາແຫ່ງຄວາມຕາຍ.[20]ຖ້າຫາກຂ້ານ້ອຍທັງຫລາຍໄດ້ລືມພ
ຣະນາມຊື່ຂອງພຣະເຈົ້າຂອງຂ້ານ້ອຍທັງຫລາຍຫລືຍື່ນມືຂຶ້ນຕໍ່ພະອື່ນ,[21]ພຣະເຈົ້າຈະບໍ່ຊົງຮູ້ບໍ່? ເພາະພຣະອົງຊົງຮູ້ຄວາມລັບຂອງຈິດໃຈ.
[22]ເພາະເຫັນແກ່ພຣະອົງ, ຂ້ານ້ອຍທັງຫລາຍຖືກຂ້າຫມົດມື້ຮອດຄໍ່າ; ຂ້ານ້ອຍທັງຫລາຍເປັນຄືແກະສໍາຫລັບນໍາໄປຂ້າ ຂ້າແດ່ອົງພຣະຜູ້ເປັນ
ເຈົ້າ.
[23]ຂໍຊົງລຸກຂຶ້ນ, ຂ້າແດ່ອົງພຣະຜູ້ເປັນເຈົ້າ ດ້ວຍເຫດໃດພຣະອົງຊົງຫລັບຢູ່? ຂໍຊົງຕື່ນເຖີດ,[24]ເຫດໃດພຣະອົງຊົງລີ້ຫນ້າຂອງພຣະອົງແລະຊົງລືມ
ຄວາມທຸກຍາກແລະການຖືກກົດຂີ່ຂອງພວກຂ້ານ້ອຍທັງຫລາຍ?
[25]ເພາະຂ້ານ້ອຍທັງຫລາຍລະລາຍໄປສູ່ຜົງຂີ້ດິນ; ຮ່າງກາຍຂອງຂ້ານ້ອຍທັງຫລາຍເກາະຕິດດິນ.[26]ຂໍຊົງລຸກຂຶ້ນເພື່ອຊ່ວຍຂ້ານ້ອຍທັງຫລາຍແລະ
ຊົງໄຖ່ຂ້ານ້ອຍທັງຫລາຍເພື່ອເຫັນແກ່ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ.

 generated on Tue Jun 17 19:01:42 2025

45 ສຳຫລັບຄະນະນັກຮ້ອງ; ເພງສັນຣະເສີນລູກຊາຍຂອງໂຄລັດ. ບົດເພງແຫ່ງຄວາມຮັກ. [1]ໃຈຂ້ານ້ອຍເຕັມລົ້ນໄປດ້ວຍເລື່ອງທີ່ດີ; ຂ້ານ້ອຍ
ຈະອ່ານຖ້ອຍຄຳທີ່ຂ້ານ້ອຍໄດ້ປະພັນກ່ຽວກັບພະຣາຊາດ້ວຍສຽງດັງ; ລີ້ນຂອງຂ້ານ້ອຍເປັນຄຳກາບກອນຜູ້ປະພັນທີ່ພ້ອມແລ້ວ. [2]ພະອົງຊົງ
ງາມສະງ່າຍິ່ງກວ່າເຊື້ອຊາດຂອງມະນຸດຄົນໃດ ພະຄຸນຖືກເທມາຍັງຣິມສົບປາກຂອງ ພະອົງ; ເພາະສະນັ້ນຂ້ານ້ອຍທັງຫລາຍຈຶ່ງຮູ້ວ່າພຣະເຈົ້າ
ໄດ້ຊົງອວຍພອນພະອົງຕະຫລອດໄປເປັນນິດ.

[3]ຂ້າແດ່ຜູ້ຊົງອຳນາດ, ຂໍຊົງຄາດດາບຂອງພະອົງໄວ້ຂ້າງກາຍ, ດ້ວຍພະສີຣິແລະບາຣາມີຂອງພະອົງ. [4]ຂໍພະອົງຊົງຂີ່ມ້າຢ່າງມີຊັຍເນື່ອງດ້ວຍ
ຄວາມສັດຈິງ, ຄວາມສຸພາບອ່ອນໂຍນ, ແລະຄວາມຊອບທັມ; ມືຂວາຂອງພະອົງຈະຊົງສອນເຖິງສິ່ງທີ່ຍິ່ງໃຫຍ່ແກ່ພະອົງ.
[5]ລູກທະນູຂອງພຣະອົງນັ້ນຄົມ; ປະຊາຊົນກໍລົ້ມລົງໃຕ້ພຣະອົງ ລູກທະນູຂອງພຣະອົງກໍຢູ່ໃນຫົວໃຈຂອງພວກສັດຕຣູຂອງພະຣາຊາ. [6]ພຣະທີ່ນັ່ງ,
ພຣະເຈົ້າ, ຂອງພະອົງດຳຣົງຢູ່ເປັນນິດ; ຄະທາແຫ່ງຄວາມຍຸຕິທັມເປັນຄະທາແຫ່ງຣາຊະອານາຈັກຂອງພະອົງ. [7]ພຣະອົງໄດ້ຊົງຮັກຄວາມຊອບ
ທັມແລະກຽດຊັງຄວາມຊົ່ວ; ເພາະສະນັ້ນພຣະເຈົ້າ, ຊຶ່ງເປັນພຣະເຈົ້າ, ຂອງພະອົງ ໄດ້ຊົງອວຍພອນພະອົງດ້ວຍນ້ຳມັນແຫ່ງຄວາມຍິນດີຍິ່ງ
ກວ່າບັນດາເພື່ອນຂອງພະອົງ.
[8]ເຄື່ອງນຸ່ງທັງຫມົດຂອງພະອົງກໍຫອມໄປດ້ວຍກິ່ນມົດຍອບ ກຳຍານ ແລະຢາງໄມ້ຫອມ ຈາກພະຣາຊວັງງາຊ້າງ ເຄື່ອງສາຍເຮັດໃຫ້ພະອົງຍິນ
ດີ[9]ບັນດາລູກສາວຂອງກະສັດຕ່າງໆ ນັ່ງຢູ່ທ່າມກາງສະຕຣີສູງສັກຂອງພະອົງ ພະຣາຊີນີປະດັບດ້ວຍທອງຄຳແຫ່ງເມືອງໂອເຟຍຢູ່ເບື້ອງຂວາມື
ຂອງພະອົງ.
[10]ຈົ່ງຟັງເຖີດ, ເຈົ້າສາວເອີຍ, ຈົ່ງວິເຄາະແລະງ່ຽງຫູຂອງພະນາງມາ; ຈົ່ງລືມປະຊາຊົນຂອງເຈົ້າແລະບ້ານລູກສາວຂອງພະນາງ. [11]ດ້ວຍວິທີນີ້ ພະ
ຣາຊາຊົງປຣາຖນາຄວາມງາມຂອງເຈົ້າ; ພະອົງຊົງເປັນເຈົ້ານາຍຂອງເຈົ້າ; ຈົ່ງເຄົາຣົບພະອົງເຖີດ.
[12]ເຈົ້າສາວແຫ່ງເມືອງຕີເຣຈະຢູ່ທີ່ນັ້ນພ້ອມກັບຂອງກຳນັນ; ເສດຖີໃນທ່າມກາງປະຊາຊົນຈະຂໍຄວາມພໍໃຈຈາກເຈົ້າ. [13]ເຈົ້າສາວຂອງກະສັດໃນພະ
ຣາຊວັງຊົງສະງ່າຣາສີທັງຫມົດ; ຜ້າຊົງຂອງພວກນາງເຮັດດ້ວຍທອງຄຳ.
[14]ນາງຖືກນຳໄປເຂົ້າເຝົ້າພະຣາຊາດ້ວຍເຄື່ອງຊົງລາຍປັກ; ລູກສາວພົມມະຈາຣີ, ບັນດາເພື່ອນຂອງນາງທີ່ຕິດຕາມນາງຈະຖືກນຳມາເຂົ້າເຝົ້າພະ
ອົງ. [15]ພວກເຂົາຈະຖືກນຳມາດ້ວຍຄວາມຍິນດີແລະຊົມຊື່ນ; ພວກເຂົາຈະເຂົ້າສູ່ພະຣາຊວັງຂອງພະຣາຊາ.
[16]ບັນດາລູກຊາຍຂອງພະອົງຈະມາແທນທີ່ບັນພະບຸຣຸດຂອງພະອົງ, ຜູ້ຊຶ່ງພະອົງຈະຊົງແຕ່ງຕັ້ງພວກເຂົາເປັນເຈົ້າປົກຄອງທົ່ວທັງແຜ່ນດິນໂລກ.
[17]ຂ້ານ້ອຍຈະເຮັດໃຫ້ຊື່ສຽງຂອງພະອົງເປັນທີ່ຣະນຶກເຖິງຕະຫລອດທຸກຊົ່ວຊາດ; ເພາະສະນັ້ນປະຊາຊົນຈະຖວາຍຂອບພະຄຸນແດ່ພະອົງສະ
ເຫມີໄປເປັນນິຣັນ.


generated on Tue Jun 17 19:01:42 2025

46 ສຳຫລັບຄະນະນັກດົນຕຣີ. ບົດເພງລູກຊາຍຂອງໂຄລັດ; ເຖິງ ອາໂມດ. ສຽງເພງ.[1]ພຣະເຈົ້າຊົງເປັນທີ່ລີ້ພັຍແລະກຳລັງຂອງເຮົາ, ເປັນ
ຄວາມຊ່ວຍເຫລືອທີ່ຕຽມພ້ອມໃນຍາມຍາກລຳບາກ.[2]ເພາະສະນັ້ນເຮົາຈະບໍ່ຢ້ານ, ແມ້ແຕ່ວ່າແຜ່ນດິນໂລກຈະປ່ຽນແປງ, ແມ່ນວ່າພູເຂົາ
ທັງຫລາຍຈະສັ່ນສະເທືອນໃນໃຈກາງຂອງທະເລ,[3]ແມ່ນວ່ານ້ຳທະເລສົ່ງສຽງຮ້ອງແລະຄື້ນຊັດແຮງ, ແລະແມ່ນພູເຂົາທັງຫລາຍຈະສັ່ນສະເທືອນ
ດ້ວຍການຂະຫຍາຍຕົວອອກຂອງມັນ. ເສລາ

[4]ມີແມ່ນ້ຳສາຍຫນຶ່ງ, ມີລຳທານແຍກຊຶ່ງເຮັດໃຫ້ນະຄອນຂອງພຣະເຈົ້າມີຄວາມສຸກ, ຄືສະຖານທີ່ສັກສິດແຫ່ງອົງຜູ້ສູງສຸດ.[5]ພຣະເຈົ້າຊົງຢູ່ທ່າມ
ກາງນະຄອນນັ້ນ; ນະຄອນນັ້ນຈະບໍ່ຫວັ່ນໄຫວ; ພຣະເຈົ້າຈະຊົງຊ່ວຍເຫລືອນະຄອນນັ້ນ, ແລະພຣະເຈົ້າຊົງເຮັດເຊັ່ນນັ້ນໃນຍາມເຊົ້າມືດ.
[6]ຊົນຊາດທັງຫລາຍກໍຫວາດຫວັ່ນຕົກໃຈ ແລະອານາຈັກຕ່າງໆກໍສັ່ນສະເທືອນ; ພໍພຣະອົງຊົງເປັ່ງສຽງຂອງພຣະອົງ, ແຜ່ນດິນໂລກກໍຖະຫລົ່ມ
ໄປ.[7]ພຣະຢາເວຈອມໂຍທາ ສະຖິດກັບເຮົາທັງຫລາຍ; ພຣະເຈົ້າຂອງຢາໂຄບຊົງເປັນທີ່ລີ້ພັຍຂອງເຮົາທັງຫລາຍ. ເສລາ
[8]ມາເຖີດ, ມາເບິ່ງບັນດາສິ່ງທີ່ພຣະເຈົ້າຢາເວກະທຳ, ເບິ່ງຄວາມພັງທະລາຍທີ່ພຣະອົງໄດ້ຊົງເຮັດໃຫ້ເກີດຂຶ້ນເທິງແຜ່ນດິນໂລກ.[9]ພຣະອົງຊົງເຮັດ
ໃຫ້ສົງຄາມສະຫງົບຈົນເຖິງທີ່ສຸດປາຍແຜ່ນດິນໂລກ; ພຣະອົງຊົງຫັກຄັນທະນູແລະສັບຫອກໃຫ້ເປັນຊິ້ນໆ; ພຣະອົງຊົງເຜົາໂລ້ທັງຫລາຍ.
[10]ຈົ່ງງຽບສະຫງົບແລະຮູ້ວ່າເຮົາຄືພຣະເຈົ້າ; ເຮົາຈະໄດ້ຮັບການຍົກຍ້ອງໃນທ່າມກາງບັນດາປະຊາຊາດ; ເຮົາຈະໄດ້ຮັບການຍົກຍ້ອງເທິງແຜ່ນ
ດິນໂລກ.[11]ພຣະຢາເວ ຈອມໂຍທາ ສະຖິດຢູ່ກັບເຮົາ; ພຣະເຈົ້າຂອງຢາໂຄບຊົງເປັນທີ່ລີ້ພັຍຂອງເຮົາທັງຫລາຍ. ເສລາ

 generated on Tue Jun 17 19:01:42 2025

47 ສຳຫລັບຄະນະນັກດົນຕຣີ. ບົດເພງສັນຣະເສີນລູກຊາຍຂອງໂຄລັດ. [1]ປະຊາກອນທັງປວງເອີຍ, ຈົ່ງຕົບມືຂອງທ່ານເຖີດ; ຈົ່ງໂຫ່ຮ້ອງແດ່ພ
ຣະເຈົ້າດ້ວຍສຽງແຫ່ງຊັຍຊະນະ. [2]ເພາະພຣະຢາເວຜູ້ສູງສຸດເປັນທີ່ນ່າຢ້ານຢຳ; ພຣະອົງຊົງເປັນກະສັດຜູ້ຍິ່ງໃຫຍ່ເຫນືອແຜ່ນດິນໂລກທັງ
ຫມົດ.

[3]ພຣະອົງຊົງປາບປະຊາກອນທັງຫລາຍໃຫ້ຢູ່ພາຍໃຕ້ເຮົາ ແລະຊົນຊາດທັງຫລາຍໃຫ້ຢູ່ພາຍໃຕ້ຕີນຂອງເຮົາ. [4]ພຣະອົງຊົງເລືອກມໍຣະດົກຂອງ
ເຮົາໄວ້ໃຫ້ພວກເຮົາ, ເປັນກຳມະສິດຂອງຢາໂຄບຜູ້ທີ່ພຣະອົງຊົງຮັກ. ເສລາ [5]ພຣະເຈົ້າຊົງສະເດັດຂຶ້ນດ້ວຍສຽງໂຫ່ຮ້ອງ, ພຣະຢາເວ
ສະເດັດຂຶ້ນດ້ວຍສຽງແກ.
[6]ຈົ່ງຮ້ອງສັນຣະເສີນແດ່ພຣະເຈົ້າ, ຈົ່ງຮ້ອງສັນຣະເສີນເຖີດ; ຈົ່ງຮ້ອງສັນຣະເສີນແດ່ກະສັດຂອງເຮົາ, ຈົ່ງຮ້ອງສັນຣະເສີນເຖີດ. [7]ເພາະພຣະເຈົ້າ
ຊົງເປັນກະສັດເຫນືອແຜ່ນດິນໂລກທັງຫມົດ; ຈົ່ງຮ້ອງສັນຣະເສີນດ້ວຍຄວາມເຂົ້າໃຈ.
[8]ພຣະເຈົ້າຊົງຄອບຄອງເຫນືອຊົນຊາດທັງຫລາຍ; ພຣະເຈົ້າຊົງຢູ່ເທິງບັນລັງບໍຣິສຸດຂອງພຣະອົງ. [9]ບັນດາເຈົ້ານາຍຂອງປະຊາກອນທັງຫລາຍໄດ້
ມາຊຸມນຸມພ້ອມກັນໃນຖານະປະຊາກອນຂອງພຣະເຈົ້າຂອງອັບຣາຮາມ; ເພາະໂລ້ທັງຫລາຍຂອງແຜ່ນດິນໂລກເປັນຂອງພຣະເຈົ້າ; ພຣະອົງຊົງ
ເປັນທີ່ຍົກຍ້ອງຢ່າງຍິ່ງໃຫຍ່.


generated on Tue Jun 17 19:01:42 2025

48 [1]ບົດເພງ; ບົດເພງສັນຣະເສີນລູກຊາຍໂຄລັດ. ພຣະຢາເວນັ້ນຍິ່ງໃຫຍ່ແລະສົມຄວນໄດ້ຮັບການສັນຣະເສີນຢ່າງຍິ່ງ, ໃນນະຄອນແຫ່ງພ
ຣະເຈົ້າຂອງເຮົາ ເທິງພູເຂົາສັກສິດຂອງພຣະອົງ.[2]ສູງສົ່ງແລະງາມຫລາຍ, ເປັນຄວາມຊື່ນຊົມຍິນດີຂອງທົ່ວທັງແຜ່ນດິນໂລກ, ຄືພູເຂົາຊີ
ໂອນ, ທາງດ້ານທິດເຫນືອ, ຊຶ່ງເປັນນະຄອນຂອງກະສັດຜູ້ຍິ່ງໃຫຍ່.[3]ພຣະເຈົ້າຊົງເຮັດໃຫ້ພຣະອົງເອງເປັນທີ່ຮູ້ຈັກກັນໃນປາສາດທັງຫລາຍຂອງຊີ
ໂອນວ່າຊົງເປັນທີ່ລີ້ພັຍ.

[4]ເພາະເບິ່ງເຖີດ, ບັນດາກະສັດໄດ້ມາຊຸມນຸມກັນ; ພວກເຂົາໄດ້ຜ່ານໄປພ້ອມກັນ.[5]ພວກເຂົາໄດ້ເຫັນນະຄອນນັ້ນ, ແລ້ວພວກເຂົາກໍປະຫລາດໃຈ
ພວກເຂົາຕ່າງທໍ້ໃຈ, ແລະພວກເຂົາກໍຮີບຫນີໄປ.[6]ຄວາມຢ້ານກົວໄດ້ຄອບງຳພວກເຂົາທີ່ນັ້ນ, ມີຄວາມເຈັບປວດດັ່ງຕອນທີ່ຜູ້ຍິງກຳລັງເກີດລູກ.
[7]ພຣະອົງຊົງທຳລາຍກອງເຮືອແຫ່ງເມືອງທາຊິດດ້ວຍລົມຕະວັນອອກ.[8]ດັ່ງທີ່ເຮົາເຄີຍໄດ້ຍິນມາ, ເຮົາກໍໄດ້ເຫັນໃນນະຄອນຂອງພຣະຢາເວ
ຈອມໂຍທາ, ເຊັ່ນນັ້ນ ໃນນະຄອນຂອງພຣະເຈົ້າຂອງເຮົາ; ພຣະເຈົ້າຈະສະຖາປະນານະຄອນນັ້ນໄວ້ຕະຫລອດໄປເປັນນິດ. ເສລາ
[9]ເຮົາໄດ້ຣະນຶກເຖິງຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ, ຂ້າແດ່ພຣະເຈົ້າ, ເມື່ອຢູ່ກາງພຣະວິຫານຂອງພຣະອົງ.[10]ພຣະນາມຊື່ຂອງພຣະອົງ
ເປັນເຊັ່ນໃດ, ຂ້າແດ່ພຣະເຈົ້າ, ຄຳສັນຣະເສີນຂອງພຣະອົງກໍໄປເຖິງທີ່ສຸດປາຍແຜ່ນດິນໂລກເຊັ່ນນັ້ນ; ພຣະຫັດຂວາຂອງພຣະອົງຊົງເຕັມໄປ
ດ້ວຍຄວາມຊອບທັມ.
[11]ໃຫ້ພູເຂົາຊີໂອນຍິນດີເຖີດ, ໃຫ້ເຫລົ່າລູກສາວຂອງຢູດາຊື່ນຊົມຍິນດີເພາະການພິພາກສາອັນຊອບທັມຂອງພຣະອົງ.
[12]ຈົ່ງຍ່າງຮອບພູເຂົາຊີໂອນເຖີດ, ຈົ່ງໄປຮອບໆຊີໂອນຈົ່ງນັບຫໍຄອຍຂອງຊີໂອນ,[13]ຈົ່ງສັງເກດກຳແພງຂອງຊີໂອນໃຫ້ດີ, ແລະເບິ່ງທີ່ປາສາດທັງ
ຫລາຍຂອງຊີໂອນເພື່ອທ່ານຈະໄດ້ເລົ່າເລື່ອງລາວໃຫ້ແກ່ຄົນໃນຊົ່ວອາຍຸຕໍ່ໄປ.
[14]ເພາະພຣະເຈົ້າອົງນີ້ຄືພຣະເຈົ້າຂອງເຮົາຕະຫລອດໄປເປັນນິດ; ພຣະອົງຈະຊົງເປັນຜູ້ນຳຂອງເຮົາຈົນເຖິງຄວາມຕາຍ.

 generated on Tue Jun 17 19:01:42 2025

49 ສຳຫລັບນັກດົນຕຣີ. ບົດເພງສັນຣະເສີນລູກຊາຍຂອງໂຄລັດ.[1]ຊົນຊາດທັງຫມົດເອີຍ, ຈົ່ງຟັງສິ່ງນີ້; ບັນດາຜູ້ອາສັຍທັງຫມົດໃນໂລກເອີຍຈົ່ງ
ງ່ຽງຫູຟັງເຖີດ,[2]ທັງຄົນຖານະຕ່ຳຕ້ອຍແລະຄົນຖານະສູງ, ທັງຄົນລ້ຳລວຍແລະຄົນຍາກຈົນດ້ວຍ.

[3]ປາກຂອງຂ້ານ້ອຍຈະເຜີຍປັນຍາ ແລະການພາວັນນາແຫ່ງຈິດໃຈຂ້ານ້ອຍຈະເປັນຄວາມເຂົ້າໃຈ.[4]ຂ້ານ້ອຍຈະງ່ຽງຫູຂອງຂ້ານ້ອຍຟັງຄຳປຽບ
ທຽບ; ຂ້ານ້ອຍຈະເລີ່ມຄຳປຽບທຽບຂອງຂ້ານ້ອຍດ້ວຍພິນເຂົາຄູ່.[5]ເປັນຫຍັງຂ້ານ້ອຍຈະຕ້ອງຢ້ານວັນແຫ່ງຄວາມຊົ່ວຮ້າຍ, ເມື່ອຄວາມບາບຜິດ
ອ້ອມຮອບຢູ່ທີ່ຕີນຂອງຂ້ານ້ອຍ?
[6]ເປັນຫຍັງຂ້ານ້ອຍຈະຕ້ອງຢ້ານບັນດາຜູ້ທີ່ວາງໃຈໃນຄວາມຮັ່ງມີຂອງພວກເຂົາແລະອວດເຖິງລະດັບຄວາມລ້ຳລວຍຂອງພວກເຂົາ?[7]ແນ່ນອນ
ບໍ່ມີໃຜສາມາດໄຖ່ພີ່ນ້ອງຂອງເຂົາຫລືຊຳຣະຄ່າໄຖ່ຕົວເຂົາໃຫ້ແກ່ພຣະເຈົ້າໄດ້,[8]ເພາະການໄຖ່ຊີວິດຂອງຄົນຫນຶ່ງນັ້ນມີຄ່າສູງຫລາຍ, ແລະບໍ່ມີ
ໃຜສາມາດຊຳຣະສິ່ງທີ່ພວກເຮົາຕິດຄ້າງໄວ້ໄດ້.
[9]ບໍ່ມີໃຜສາມາດມີຊີວິດຢູ່ໄດ້ຕະຫລອດໄປເພື່ອຮ່າງກາຍຂອງເຂົາຈະບໍ່ເນົ່າເປື່ອຍ.[10]ເພາະເຂົາຈະເຫັນຄວາມເນົ່າເປື່ອຍ; ຄົນມີປັນຍາກໍຕາຍ ຄົນ
ໂງ່ແລະຄົນຂີ້ຕົວະກໍພິນາດເຫມືອນກັນ ແລະຖິ້ມຄວາມຮັ່ງມີຂອງພວກເຂົາໄວ້ໃຫ້ແກ່ຄົນອື່ນ.
[11]ຄວາມຄິດໃນໃຈຂອງພວກເຂົາຄືຄອບຄົວຂອງພວກເຂົາຈະຢູ່ຕະຫລອດໄປເປັນນິດ, ແລະເປັນທີ່ຢູ່ອາສັຍຂອງເຂົາທຸກຊົ່ວເຊື້ອຊາດ; ພວກເຂົາ
ຮ້ອງທີ່ດິນຂອງພວກເຂົາຕາມຊື່ຂອງພວກເຂົາເອງ.
[12]ແຕ່ມະນຸດ, ແມ່ນມີຄວາມຮັ່ງມີກໍບໍ່ສາມາດຮັກສາຊີວິດໄວ້ໄດ້; ເຂົາເປັນດັ່ງໂຕສັດຕ່າງໆທີ່ພິນາດໄດ້.[13]ນີ້ຄື, ວິທີທາງ, ຂອງຄວາມໂງ່ຈ້າຂອງ
ພວກເຂົາ; ແລະຕໍ່ຈາກເຂົາ ກໍຄືພວກທີ່ຍອມຮັບຄຳເວົ້າຂອງພວກເຂົາ. ເສ ລາ
[14]ເປັນເຫມືອນແກະ ພວກເຂົາຖືກກຳນົດໄວ້ສຳລັບແດນຄົນຕາຍ, ແລະຄວາມຕາຍຈະເປັນຜູ້ລ້ຽງແກະຂອງພວກເຂົາ. ຄົນຊື່ສັດຈະປົກຄອງ
ເຫນືອພວກເຂົາໃນຍາມເຊົ້າ, ແລະຮ່າງກາຍຂອງພວກເຂົາຈະເນົ່າເປື່ອຍໄປໃນແດນຄົນຕາຍ, ແລະບໍ່ມີທີ່ໃຫ້ພວກເຂົາຢູ່ອາສັຍ.[15]ແຕ່ພຣະເຈົ້າ
ຈະຊົງໄຖ່ຊີວິດຂອງຂ້ານ້ອຍຈາກອຳນາດຂອງແດນຄົນຕາຍ; ພຣະອົງຈະຊົງຮັບຂ້ານ້ອຍໄວ້. ເສລາ
[16]ຢ່າຢ້ານເມື່ອຜູ້ຫນຶ່ງໄດ້ກາຍເປັນຄົນລ້ຳລວຍ, ແລະຊັບສິນຂອງບ້ານເຂົາເພີ່ມຫລາຍຂຶ້ນ.[17]ເພາະເມື່ອເຂົາຕາຍ ເຂົາຈະເອົາຫຍັງໄປບໍ່ໄດ້ເລີຍ;
ຊັບສິນຂອງເຂົາຈະບໍ່ຕາມເຂົາລົງໄປ.
[18]ເມື່ອເຂົາຍັງມີຊີວິດຢູ່ ຈິດໃຈຂອງເຂົາກໍເປັນສຸກ - ແລະມະນຸດທັງຫລາຍສັນຣະເສີນເຈົ້າເມື່ອເຈົ້າຢູ່ເພື່ອຕົວເອງ -[19]ເຂົາຈະໄປຢູ່ກັບຄົນໃນຍຸກ
ບັນພະບຸຣຸດຂອງເຂົາ ແລະພວກເຂົາຈະບໍ່ໄດ້ເຫັນຄວາມສະຫວ່າງອີກເລີຍ.[20]ບຸກຄົນຜູ້ທີ່ມີຄວາມຮັ່ງມີ ແຕ່ບໍ່ມີຄວາມເຂົ້າໃຈກໍເປັນເຫມືອນ, ດັ່ງ
ເຫລົ່າສັດເດຍຣະສານຊຶ່ງຕ້ອງພິນາດໄປ.

50 ບົດເພງສັນຣະເສີນຂອງອາສາບ.[1]ພຣະເຈົ້າຜູ້ຊົງຣິດອຳນາດ, ຂ້າແຕ່ພຣະຢາເວ, ໄດ້ຊົງກ່າວ ແລະໄດ້ຊົງເອີ້ນແຜ່ນດິນໂລກຈາກທີ່ຕາເວັນ
ຂຶ້ນໄປຈົນເຖິງທີ່ຕາເວັນຕົກ.[2]ສຽງອອກມາຈາກຊີໂອນ, ເປັນຄວາມງົດງາມທີ່ສົມບູນພ້ອມ, ພຣະເຈົ້າໄດ້ສົ່ງສຽງອອກມາຈາກທີ່ນັ້ນ.

[3]ພຣະເຈົ້າຂອງເຮົາສະເດັດມາແລະບໍ່ຊົງງຽບຢູ່; ໄຟໄດ້ເຜົາຜານຢູ່ເບື້ອງຫນ້າພຣະອົງ, ແລະມີພາຍຸຮຸນແຮງອ້ອມຮອບພຣະອົງ.[4]ພຣະອົງຊົງ
ເອີ້ນຟ້າສະຫວັນເບື້ອງເທິງແລະແຜ່ນດິນໂລກເພື່ອພຣະອົງຈະໄດ້ພິພາກສາປະຊາກອນຂອງພຣະອົງ:[5]"ຈົ່ງຮວບຮວມຄົນທີ່ຊື່ສັດຂອງເຮົາມາໃຫ້
ເຮົາ, ຄືບັນດາຜູ້ທີ່ໄດ້ເຮັດຄຳສັນຍາກັບເຮົາດ້ວຍເຄື່ອງບູຊາ."
[6]ຟ້າສະຫວັນຈະປະກາດຄວາມຊອບທັມຂອງພຣະອົງ, ເພາະພຣະເຈົ້າເອງຊົງເປັນຜູ້ພິພາກສາ. ເສລາ
[7]ຈົ່ງຟັງເຖີດ, ປະຊາກອນຂອງເຮົາເອີຍ, ແລະເຮົາຈະເວົ້າ, ເຮົາຄື ພຣະເຈົ້າ, ພຣະເຈົ້າຂອງເຈົ້າ.[8]ເຮົາຈະບໍ່ຕຳນິເຈົ້າໃນເລື່ອງເຄື່ອງບູຊາຂອງ
ເຈົ້າ; ເຄື່ອງເຜົາບູຊາຂອງເຈົ້າຢູ່ຕໍ່ຫນ້າເຮົາສະເຫມີ.
[9]ເຮົາຈະບໍ່ຮັບງົວໂຕຜູ້ຈາກເຮືອນຂອງເຈົ້າ, ຫລືແພະໂຕຜູ້ຈາກຄອກຂອງເຈົ້າ.[10]ເພາະສັດທຸກໂຕໃນປ່າເປັນຂອງເຮົາ, ລວມທັງຝູງງົວເທິງພູເຂົາ
ນັບພັນລູກ.[11]ເຮົາຮູ້ຈັກນົກທຸກໂຕແຫ່ງພູເຂົາທັງຫລາຍ, ແລະສັດປ່າແຫ່ງທ້ອງທົ່ງເປັນຂອງເຮົາ.
[12]ຖ້າເຮົາຫິວ, ເຮົາຈະບໍ່ບອກເຈົ້າ, ເພາະໂລກນີ້ເປັນຂອງເຮົາ, ລວມທັງທຸກສິ່ງໃນນັ້ນດ້ວຍ.[13]ເຮົາຈະກິນເນື້ອງົວໂຕຜູ້ຫລືດື່ມເລືອດຂອງແພະບໍ່?
[14]ຈົ່ງຖະຫວາຍເຄື່ອງບູຊາແຫ່ງການຂອບພຣະຄຸນແດ່ພຣະເຈົ້າ, ແລະຖວາຍຄຳປະຕິຍານແດ່ອົງຜູ້ສູງສຸດ.[15]ຈົ່ງຮ້ອງທູນເຮົາໃນວັນຍາກລຳບາກ;
ເຮົາຈະຊ່ວຍກູ້ເຈົ້າ, ແລະເຈົ້າຈະຖວາຍກຽຕເຮົາ."
[16]ແຕ່ພຣະເຈົ້າຊົງກ່າວກັບຄົນຊົ່ວວ່າ, "ເຈົ້າມີສິດຫຍັງມາປະກາດກົດເກນຂອງເຮົາ, ທີ່ເຈົ້າໄດ້ຮັບຄຳສັນຍາຂອງເຮົາດ້ວຍປາກຂອງເຈົ້າ,[17]ໃນ
ເມື່ອເຈົ້າກຽດຊັງຄຳສັ່ງສອນແລະຖິ້ມຖ້ອຍຄຳຂອງເຮົາໄປ?
[18]ເມື່ອເຈົ້າເຫັນໂຈນ, ເຈົ້າກໍຄົບກັບເຂົາ; ເຈົ້າມີສ່ວນຮ່ວມກັບບັນດາຜູ້ລາວລ່ວງປະເວນີ.[19]ເຈົ້າຍົກປາກຂອງເຈົ້າໃຫ້ແກ່ຄວາມຊົ່ວ, ແລະລີ້ນຂອງ
ເຈົ້າເວົ້າຄຳຫລອກລວງ.[20]ເຈົ້ານັ່ງລົງແລະເວົ້າຕໍ່ຕ້ານພີ່ນ້ອງຂອງເຈົ້າ; ເຈົ້າໃສ່ຮ້າຍລູກຂອງແມ່ຂອງເຈົ້າເອງ.
[21]ເຈົ້າໄດ້ເຮັດສິ່ງເຫລົ່ານີ້ ແຕ່ເຮົາໄດ້ມິດງຽບ, ແລ້ວເຈົ້າກໍຄິດວ່າເຮົາເປັນເຫມືອນກັບເຈົ້. ແຕ່ເຮົາຈະຕຳນິເຈົ້າແລະເວົ້າທຸກສິ່ງທີ່ເຈົ້າ,ໄດ້ກະທຳ
ຂຶ້ນມາຕໍ່ຕາຂອງເຈົ້າ.[22]ຈົ່ງພິຈາຣະນາເລື່ອງນີ້ໃຫ້ດີ, ເຈົ້າຜູ້ລືມພຣະເຈົ້າ, ບໍ່ສະນັ້ນເຮົາຈະຈີກເຈົ້າອອກເປັນຕ່ອນໆ, ແລະຈະບໍ່ມີໃຜມາຊ່ວຍເຈົ້າ
ໄດ້ເລີຍ.
[23]ບຸກຄົນຜູ້ທີ່ຖວາຍເຄື່ອງບູຊາແຫ່ງການຂອບພຣະຄຸນສັນຣະເສີນເຮົາ, ແລະທຸກຄົນທີ່ວາງທາງຢ່າງຂອງເຂົາໃນທາງທີ່ຖືກຕ້ອງ, ເຮົາກໍຈະສຳ
ແດງຄວາມພົ້ນຂອງພຣະເຈົ້າ."


generated on Tue Jun 17 19:01:42 2025

51 ສຳຫລັບຄະນະນັກດົນຕຣີ. ເພງສັນຣະເສີນຂອງກະສັດດາວິດ; ເມື່ອຕອນທີ່ ນາທານຜູ້ເຜີຍພຣະຄັມມາຫາທ່ານຫລັງທີ່ລາວໄດ້ນອນກັບ
ບັດເຊບາ.[1] ຂໍຊົງເມດຕາຂ້ານ້ອຍ, ຂ້າແດ່ພຣະເຈົ້າ, ຕາມຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ; ເພື່ອເຫັນແກ່ການກະທຳຫລວງ
ຫລາຍອັນຊົງເມດຕາອັນຍິ່ງໃຫຍ່ຂອງພຣະອົງ, ຂໍຊົງລົບບັນດາການບາບຂອງຂ້ານ້ອຍ.[2]ຂໍຊົງລ້າງຂ້ານ້ອຍໃຫ້ຫມົດກ້ຽງຈາກຄວາມຜິດຂອງຂ້າ
ນ້ອຍ ແລະຂໍຊົງຊຳຣະຂ້ານ້ອຍຈາກບາບຂອງຂ້ານ້ອຍ.

[3]ເພາະຂ້ານ້ອຍຮູ້ເຖິງບັນດາຄວາມຜິດບາບຂອງຂ້ານ້ອຍ, ແລະບາບຂອງຂ້ານ້ອຍກໍຢູ່ຕໍ່ຫນ້າຂ້ານ້ອຍສະເຫມີ.[4]ຂ້ານ້ອຍໄດ້ເຮັດບາບຕໍ່ ພຣະອົງ,
ຕໍ່ພຣະອົງເທົ່ານັ້ນ, ແລະໄດ້ເຮັດສິ່ງທີ່ຊົ່ວໃນສາຍຕາຂອງພຣະອົງ; ພຣະອົງຊົງຖືກຕ້ອງເມື່ອພຣະອົງກ່າວ; ພຣະອົງຊົງຖືກຕ້ອງເມື່ອພຣະອົງຊົງ
ຕັດສິນ.
[5]ເບິ່ງເຖີດ, ຂ້ານ້ອຍໄດ້ເກີດມາໃນຄວາມບາບ; ທັນທີທີ່ແມ່ຂອງຂ້ານ້ອຍຖືພາຂ້ານ້ອຍ, ຂ້ານ້ອຍກໍຢູ່ໃນຄວາມບາບແລ້ວ.[6]ເບິ່ງເຖີດ, ພຣະອົງຊົງ
ປຣາຖນາຄວາມຊື່ສັດສຸຈະຣິດໃນໃຈຂອງຂ້ານ້ອຍ; ພຣະອົງຈະຊົງເຮັດໃຫ້ຂ້ານ້ອຍຮູ້ຈັກສະຕິປັນຍາໃນໃຈຂອງຂ້ານ້ອຍ.
[7]ຂໍຊົງຊຳຣະຂ້ານ້ອຍໃຫ້ບໍຣິສຸດດ້ວຍຕົ້ນຫູສົບ, ແລະຂ້ານ້ອຍຈະສະອາດ; ຂໍຊົງລ້າງຂ້ານ້ອຍ, ແລະຂ້ານ້ອຍຈະຂາວຍິ່ງກວ່າຫິມະ.[8]ຂໍຊົງໃຫ້ຂ້າ
ນ້ອຍໄດ້ຍິນ ເຖິງຄວາມຊົມຊື່ນເບີກບານແລະຄວາມຍິນດີ ເພື່ອກະດູກທີ່ພຣະອົງໄດ້ຊົງຫັກຈະໄດ້ຍິນດີ.[9]ຂໍຊົງລີ້ຫນ້າຂອງພຣະອົງຈາກບາບທັງ
ຫລາຍຂອງຂ້ານ້ອຍແລະຊົງລົບຄວາມຜິດທັງສິ້ນຂອງຂ້ານ້ອຍເສຍ.
[10]ຂໍຊົງສ້າງໃຈສະອາດພາຍໃນຂ້ານ້ອຍ, ຂ້າແດ່ພຣະເຈົ້າ, ແລະຊົງສ້າງຈິດວິນຍານທີ່ຖືກຕ້ອງຂຶ້ນໃຫມ່ພາຍໃນຂ້ານ້ອຍ.[11]ຂໍຢ່າຊົງໄລ່ຂ້ານ້ອຍ
ໃຫ້ພົ້ນຈາກພຣະພັກຂອງພຣະອົງ, ແລະຂໍຢ່າຊົງເອົາພຣະວິນຍານບໍຣິສຸດຂອງພຣະອົງໄປຈາກຂ້ານ້ອຍ.
[12]ຂໍຊົງຮື້ຟື້ນຄວາມຊົມຊື່ນໃນຄວາມພົ້ນຂອງພຣະອົງໃຫ້ແກ່ຂ້ານ້ອຍ, ແລະຂໍຊົງຮັກສາຂ້ານ້ອຍໄວ້ ພຣະອົງດ້ວຍວິນຍານແຫ່ງຄວາມເຕັມໃຈ.
[13]ແລ້ວຂ້ານ້ອຍຈະສອນບັນດາຄົນບາບເຖິງພຣະຄຳສັ່ງຂອງພຣະອົງ, ແລະບັນດາຄົນບາບຈະຫັນກັບມາຫາພຣະອົງ ຂ້າແດ່ພຣະເຈົ້າແຫ່ງ
ຄວາມພົ້ນຂອງຂ້ານ້ອຍ.
[14]ຂໍຊົງອະພັຍຂ້ານ້ອຍໃນການຫລັ່ງເລືອດ, ຂ້າແດ່ພຣະເຈົ້າ, ແລະຂ້ານ້ອຍຈະໂຫ່ຮ້ອງສຳລັບຄວາມຍິນດີແຫ່ງຄວາມຊອບທັມຂອງພຣະອົງ.
[15]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍຊົງເປີດຮີມສົບປາກຂອງຂ້ານ້ອຍ, ແລະປາກຂອງຂ້ານ້ອຍຈະກ່າວຄຳສັນຣະເສີນພຣະອົງ.[16]ເພາະພຣະອົງບໍ່ຊົງ
ຍິນດີໃນເຄື່ອງບູຊາ, ເຖິງຂ້ານ້ອຍຈະຖວາຍ; ໃຫ້ພຣະອົງກໍບໍ່ໄດ້ຊົງພໍໃຈໃນເຄື່ອງເຜົາບູຊາທັງຫລາຍ.
[17]ເຄື່ອງບູຊາຂອງພຣະເຈົ້າຄືຈິດວິນຍານທີ່ແຕກສະຫລາຍ. ຂ້າແດ່ພຣະເຈົ້າ, ພຣະອົງຈະບໍ່ຊົງດູຫມິ່ນຈິດໃຈທີ່ແຕກສະຫລາຍແລະໃຈທີ່ສຳນຶກ
ຜິດເລີຍ.[18]ຂໍຊົງເຮັດດີແກ່ຊີໂອນຕາມຄວາມພໍໃຈຂອງພຣະອົງ; ຂໍຊົງສ້າງກຳແພງຂອງເຢຣູຊາເລັມຂຶ້ນໃຫມ່.[19]ແລ້ວພຣະອົງຈະຊົງພໍໃຈໃນບັນ
ດາເຄື່ອງບູຊາແຫ່ງຄວາມຊອບທັມ, ໃນບັນດາສັດບູຊາແລະເຄື່ອງເຜົາບູຊາທັງຕົວ; ແລ້ວປະຊາກອນຂອງຂ້ານ້ອຍທັງຫລາຍຈະຖວາຍງົວໂຕຜູ້
ເທິງແທ່ນບູຊາຂອງພຣະອົງ.


generated on Tue Jun 17 19:01:42 2025

52 ສຳລັບບັກຄົນຕຣີ. ຄຳແນະນຳຂອງດາວິດ; ເມື່ອອາຣົມຄວາມຮູ້ສຶກມາ ແລະບອກກັບຈິດວິນຍານ, ແລະບອກກັບລາວວ່າ,"ດາວິດໄດ້ມາທີ່
ເຮືອນຂອງອາຄີເມເດັດ."[1]ເຈົ້າຜູ້ມີອຳນາດ ເປັນຫຍັງເຈົ້າເຖິງພູມໃຈໃນການສ້າງປັນຫາ? ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະເຈົ້າມາ
ທຸກມື້.[2]ລີ້ນຂອງເຈົ້າວາງແຜນທຳລາຍດັ່ງມີດໂກນທີ່ຄົມ, ເຮັດການຫລອກລວງ.

[3]ເຈົ້າຮັກຄວາມຊົ່ວຫລາຍກວ່າຄວາມດີ ແລະຮັກການຂີ້ຕົວະຫລາຍກວ່າການເວົ້າເຖິງຄວາມຊອບທັມ. ເສລາ
[4]ເຈົ້າຮັກຖ້ອຍຄຳທັງຫມົດທີ່ກັດກິນຄົນອື່ນ, ເຈົ້າຜູ້ມີລີ້ນຫລອກລວງ.[5]ພຣະເຈົ້າຈະຊົງທຳລາຍເຈົ້າຕະຫລອດໄປເປັນນິດ; ພຣະອົງຈະຊົງຈັບເຈົ້າ
ແລະຊົງດຶງເຈົ້າອອກຈາກເຕັນຂອງເຈົ້າ ແລະຊົງຖອນຮາກຖອນໂຄນເຈົ້າອອກຈາກແຜ່ນດິນຂອງຄົນເປັນ. ເສ ລາ
[6]ຄົນຊອບທັມຈະເຫັນແລະຢ້ານ; ພວກເຂົາຈະຫົວເຢາະເຢີ້ຍຄົນອະທັມແລະກ່າວວ່າ,[7]" ຈົ່ງເບິ່ງ, ນີ້ຄືຜູ້ຊາຍທີ່ບໍ່ໃຫ້ພຣະເຈົ້າເປັນທີ່ລີ້ໄພຂອງ
ເຂົາ, ແຕ່ເຂົາໄດ້ວາງໃຈ ໃນຄວາມອຸດົມສົມບູນຂອງຄວາມຮັ່ງມີຂອງເຂົາ, ແລະເຂົາໄດ້ມີກຳລັງຂຶ້ນເມື່ອເຂົາໄດ້ທຳລາຍຄົນອື່ນ."
[8]ແຕ່ສຳລັບຂ້ານ້ອຍແລ້ວ, ຂ້ານ້ອຍເປັນດັ່ງຕົ້ນຫມາກກອກເທດຂຽວສົດໃນພຣະວິຫານຂອງພຣະເຈົ້າ; ຂ້ານ້ອຍຈະວາງໃຈໃນຄວາມຊື່ສັດແຫ່ງ
ຄຳສັນຍາຂອງພຣະເຈົ້າຕະຫລອດໄປເປັນນິດ.[9]ຂ້ານ້ອຍຈະຖວາຍຂອບພຣະຄຸນພຣະອົງຕະຫລອດໄປເປັນນິດສຳລັບສິ່ງທີ່ພຣະອົງໄດ້ຊົງເຮັດ.
ຂ້ານ້ອຍຈະລໍຄອຍພຣະນາມຊື່ຂອງພຣະອົງ, ເພາະວ່າເປັນພຣະນາມຊື່ທີ່ປະເສີດ, ຕໍ່ຫນ້າບັນດາຜູ້ຊອບທັມຂອງພຣະອົງ.


generated on Tue Jun 17 19:01:42 2025

53 ສຳລັບນັກດົນຕີຣ; ສົງເຖິງມາຫາຣາດ. ຄຳແນະນຳຂອງດາວິດ.[1]ຄົນໂງ່ເວົ້າໃນໃຈຂອງເຂົາວ່າ,"ບໍ່ມີພຣະເຈົ້າ." ພວກເຂົາກໍຊົ່ວຊາມລົງ
ແລະໄດ້ເຮັດຄວາມຜິດບາບທີ່ຫນ້າກຽດຫນ້າຊັງ ບໍ່ມີໃຜເຮັດຄວາມດີເລີຍ.[2]ພຣະເຈົ້າຊົງຫລຽວລົງມາຈາກຟ້າສະຫວັນເພື່ອເບິ່ງບັນດາລູກ
ຂອງມະນຸດ ເພື່ອເບິ່ງວ່າມີໃຜແດ່ທີ່ເຂົ້າໃຈ, ມີໃຜແດ່ທີ່ສະແຫວງຫາພຣະອົງ.[3]ພວກເຂົາທັງຫມົດຕ່າງຫັນຫນີໄປ. ພວກເຂົາຕ່າງກໍຊົ່ວລົງດ້ວຍ
ກັນ. ບໍ່ມີຈັກຄົນທີ່ເຮັດດີ ບໍ່ມີແມ່ນແຕ່ຄົນດຽວ.

[4]ບັນດາຜູ້ທີ່ເຮັດຄວາມຜິດບາບ - ຄືບັນດາຜູ້ທີ່ກືນກິນປະຊາກອນຂອງເຮົາຄືດັ່ງກິນເຂົ້າຫນົມປັງແລະພວກເຂົາບໍ່ຮ້ອງທູນພຣະເຈົ້າ ບໍ່ມີຄວາມ
ເຂົ້າໃຈບໍ່?[5]ພວກເຂົາຕ່າງຕົກຢູ່ໃນຄວາມຢ້ານຢ່າງຫລາຍ, ແມ່ນວ່າບໍ່ມີສາເຫດທີ່ເຮັດໃຫ້ຢ້ານ; ເພາະພຣະເຈົ້າຈະຊົງເຮັດໃຫ້ກະດູກຂອງຜູ້ທີ່
ຈະຕັ້ງຄ້າຍຕໍ່ສູ້ເຈົ້າກະແຈກກະຈາຍໄປ; ຄົນແບບນັ້ນຈະໄດ້ຮັບຄວາມອັບອາຍເພາະພຣະເຈົ້າໄດ້ຊົງປະຕິເສດພວກເຂົາແລ້ວ.
[6]ໂອ, ຄວາມພົ້ນຂອງອິສະຣາເອນຈະມາຈາກຊີໂອນ! ເມື່ອພຣະເຈົ້າຊົງນຳປະຊາກອນພຣະອົງກັບຄືນມາຈາກການເປັນຊະເລີຍ, ແລ້ວຢາໂຄບ
ຈະຊື່ນຊົມຍິນດີແລະອິດສະຣາເອນຈະຍິນດີ!

 generated on Tue Jun 17 19:01:42 2025

54 ສຳລັບນັກດົນຕີ; ເຄື່ອງດົນຕຣີ. ຄຳແນະນຳຂອງດາວິດ; ເມື່ອ ມາແລະເວົ້າກັບໂຊນວ່າ,"ເປັນຫຍັງດາວິດຈຶ່ງເຊື່ອງພະອົງຈາກພວກ
ເຮົາ?"[1]ຂໍຊົງຊ່ວຍຂ້ານ້ອຍ, ຂ້າແດ່ພຣະເຈົ້າ, ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນໂດຍພຣະນາມຊື່ຂອງພຣະອົງ, ແລະຊົງຕັດສິນຂ້ານ້ອຍດ້ວຍພຣະ
ກຳລັງຂອງພຣະອົງ.[2]ຂ້າແດ່ພຣະເຈົ້າ, ຂໍຊົງຟັງຄຳອະທິຖານຂອງຂ້ານ້ອຍ, ຂໍຊົງງ່ຽງຫູຟັງຖ້ອຍຄຳຈາກປາກຂ້ານ້ອຍ.[3]ເພາະຄົນແປກຫນ້າໄດ້
ລຸກຂຶ້ນຕໍ່ສູ້ຂ້ານ້ອຍ, ແລະພວກຄົນໂຫດຮ້າຍໄດ້ຫມາຍເອົາຊີວິດຂອງຂ້ານ້ອຍ ພວກເຂົາບໍ່ເຫັນພຣະເຈົ້າຢູ່ໃນສາຍຕາຂອງພວກເຂົາ. ເສລາ

[4]ເບິ່ງເຖີດ, ພຣະເຈົ້າຊົງເປັນຜູ້ຊ່ວຍເຫລືອຂອງຂ້ານ້ອຍ; ອົງພຣະຜູ້ເປັນເຈົ້າຊົງເປັນຜູ້ຄ້ຳຈູນຊີວິດຂ້ານ້ອຍ.[5]ພຣະອົງຈະຊົງຕອບໂຕ້ບັນດາສັດຕຣູ
ຂອງຂ້ານ້ອຍດ້ວຍສິ່ງຊົ່ວຮ້າຍ; ຂໍຊົງທຳລາຍພວກເຂົາດ້ວຍຄວາມຊື່ສັດຂອງພຣະອົງ, ທຳລາຍພວກເຂົາ!
[6]ຂ້ານ້ອຍຈະຖວາຍເຄື່ອງບູຊາແດ່ພຣະອົງດ້ວຍເຄື່ອງບູຊາສະມັກໃຈ; ຂ້ານ້ອຍຈະຖວາຍຂອບພຣະຄຸນແດ່ພຣະນາມຊື່ຂອງພຣະອົງ, ຂ້າແດ່ພຣ
ະຢາເວ, ເພາະພຣະນາມຊື່ນັ້ນປະເສີດ.[7]ເພາະພຣະອົງໄດ້ຊົງຊ່ວຍເຫລືອຂ້ານ້ອຍຈາກຄວາມຍາກລຳບາກທຸກຢ່າງ; ຕາຂອງຂ້ານ້ອຍໄດ້ເບິ່ງ
ເຫັນຊັຍຊະນະເຫນືອພວກສັດຕຣູຂອງຂ້ານ້ອຍ.

 generated on Tue Jun 17 19:01:42 2025

55 ສຳລັບນັກດົນຕຣີ; ເຄື່ອງດົນຕຣີ. ຄຳແນະນຳຂອງດາວິດ.[1]ຂໍຊົງງ່ຽງຫູຟັງຄຳອະທິຖານຂອງຂ້ານ້ອຍ, ຂ້າແດ່ພຣະເຈົ້າ; ແລະຂໍຊົງຢ່າລືມ
ຣະອົງຈາກຄຳວິງວອນຂອງຂ້ານ້ອຍ.[2]ຂໍຊົງສະດັບຟັງຂ້ານ້ອຍແລະຊົງຕອບຂ້ານ້ອຍ; ຂ້ານ້ອຍບໍ່ໄດ້ບັນເທົາໃນຄວາມລຳບາກຂອງຂ້າ
ນ້ອຍ[3]ເພາະສຽງພວກສັດຕຣູຂອງຂ້ານ້ອຍ, ເພາະການກົດຂີ່ຂອງຄົນຊົ່ວ; ເຫດວ່າພວກເຂົານຳຄວາມທຸກມາໃຫ້ຂ້ານ້ອຍແລະຂົ່ມເຫັງຂ້ານ້ອຍ
ດ້ວຍຄວາມໂກດຮ້າຍ.

[4]ໃຈຂອງຂ້ານ້ອຍສັ່ນຢ້ານຢູ່ພາຍໃນ, ແລະຄວາມເປັນຕາຢ້ານຂອງຄວາມຕາຍໄດ້ຕົກມາເຖິງຂ້ານ້ອຍ.[5]ຄວາມຢ້ານແລະຄວາມສັ່ນເຊັ່ນມາ
ເຫນືອຂ້ານ້ອຍ, ແລະຄວາມຢ້ານໄດ້ຖ້ວມລົ້ນຂ້ານ້ອຍ.
[6]ຂ້ານ້ອຍກ່າວວ່າ, "ໂອ, ຂໍພຽງຂ້ານ້ອຍມີປີກດັ່ງນົກພິລາບ! ແລ້ວຂ້ານ້ອຍກໍຈະບິນຫນີໄປແລະຢູ່ຢ່າງສະຫງົບ.[7]ເບິ່ງເຖີດ, ແລ້ວຂ້ານ້ອຍຈະບິນ
ຫນີໄປໃຫ້ໄກ; ຂ້ານ້ອຍຈະພັກໃນຖິ່ນແຫ້ງແລ້ງກັນດານ. ເສລາ
[8]ຂ້ານ້ອຍຈະຮີບໄປຍັງທີ່ກຳບັງໃຫ້ພົ້ນຈາກລົມແຮງກ້າແລະພາຍຸ."[9]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍຊົງເຜົາຜານພວກເຂົາ, ຂໍຊົງໃຫ້ພາສາຂອງ
ພວກເຂົາວຸ້ນວາຍໄປ! ເພາະຂ້ານ້ອຍເຄີຍເຫັນຄວາມຮຸນແຮງແລະຄວາມວຸ້ນວາຍໃນເມືອງ.
[10]ພວກເຂົາຍ່າງເທິງກຳແພງເມືອງຢູ່ທັງເວັນທັງຄືນ; ແລະຄວາມຊົ່ວຮ້າຍແລະຄວາມທຸກຮ້ອນຢູ່ໃນທ່າມກາງເມືອງນັ້ນ.[11]ຄົນຊົ່ວຮ້າຍຢູ່ໃນທ່າມ
ກາງເມືອງນັ້ນ; ການກົດຂີ່ແລະການຫລອກລວງບໍ່ໄດ້ຫາຍຈາກຫົນທາງຂອງເມືອງນັ້ນໄປເລີຍ.
[12]ເພາະບໍ່ແມ່ນສັດຕຣູທີ່ນາບຂູ່ຂ້ານ້ອຍ, ຂ້ານ້ອຍຈຶ່ງຈະທົນໄດ້ ແລະບໍ່ແມ່ນຜູ້ທີ່ກຽດຊັງຂ້ານ້ອຍ; ທີ່ໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ, ແລ້ວຂ້ານ້ອຍຈຶ່ງຈະ
ລີ້ຕົວຈາກເຂົາ.[13]ແຕ່ເປັນທ່ານ, ເປັນຜູ້ເທົ່າທຽມກັບຂ້ານ້ອຍ, ເປັນເພື່ອນສະຫນິດຂອງຂ້ານ້ອຍ.[14]ເຮົາເຄີຍມີສາມະຄີທົ່ມທີ່ຫນ້າຊື່ນໃຈດ້ວຍກັນ;
ເຮົາເຄີຍຍ່າງໃນພຣະວິຫານຂອງພຣະເຈົ້າພ້ອມກັບຝູງຊົນ.
[15]ຂໍໃຫ້ຄວາມຕາຍມາເຖິງພວກເຂົາໃນທັນທີ; ຂໍໃຫ້ພວກເຂົາລົງໄປຍັງແດນຄົນຝຕາຍທັງເປັນ, ເປັນສະຖານທີ່ຄວາມຊົ່ວຮ້າຍ, ຢູ່ໃນທ່າມກາງ
ພວກເຂົາ.
[16]ແຕ່ສຳຫລັບເຮົາ, ເຮົາຈະຮ້ອງຫາພຣະເຈົ້າ, ແລະພຣະຢາເວຈະຊົງຊ່ວຍເຮົາໃຫ້ພົ້ນ.[17]ໃນເວລາແລງ, ເວລາເຊົ້າແລະທ່ຽງ ເຮົາຮ້ອງທຸກແລະ
ຄ້ຳຄວນ; ພຣະອົງຈະຊົງຟັງສຽງຂອງເຮົາ.[18]ພຣະອົງຈະຊ່ວຍກູ້ຊີວິດຂອງເຮົາໃຫ້ປອດພັຍຈາກສົງຄາມທີ່ຕໍ່ຕ້ານເຮົາ, ເພາະບັນດາຄົນທີ່ຕໍ່ສູ້ເຮົາ
ມີກັນຫລວງຫລາຍ.
[19]ຂ້າແດ່ພຣະເຈົ້າ, ຜູ້ຊົງຄອບຄອງຈາກນິຣັນການ, ຈະຊົງສະດັບຟັງແລະເຮັດໃຫ້ພວກເຂົາອັບອາຍ. ພວກເຂົາບໍ່ເຄີຍປ່ຽນ, ແລະພວກເຂົາບໍ່
ຢ້ານກົວພຣະເຈົ້າ.
[20]ເພື່ອນຂອງເຮົາໄດ້ຍົກມືຂອງເຂົາຂຶ້ນຕໍ່ສູ້ບັນດາຄົນທີ່ຢູ່ສະຫງົບກັບເຂົາ; ເຂົາບໍ່ເຄົາຣົບຕໍ່ຄຳສັນຍາທີ່ເຂົາເຄີຍເຮັດໄວ້.[21]ຄຳເວົ້າຂອງເຂົາລື່ນ
ເຫມືອນເນີຍ, ແຕ່ໃນໃຈຂອງເຂົາມີຄວາມເປັນສັດຕຣູ ຖ້ອຍຄຳຂອງເຂົານຸ້ມນວນກວ່ານ້ຳມັນ; ແຕ່ພວກເຂົາເປັນຄືດາບທີ່ຖືກຊັກອອກມາແລ້ວ.
[22]ຈົ່ງວາງພາລະຂອງທ່ານໄວ້ກັບພຣະຢາເວ, ແລະພຣະອົງຈະຊົງຄ້ຳຊູທ່ານ; ພຣະອົງຈະບໍ່ຊົງຍອມໃຫ້ຄົນຊອບທັມພ່າຍແພ້ເລີຍ.[23]ແຕ່ພຣະອົງ,
ຂ້າແດ່ພຣະເຈົ້າ, ຈະຊົງໂຍນຄົນຊົ່ວລົງສູ່ຂຸມແຫ່ງການຖືກທຳລາຍ; ພວກທີ່ກະຫາຍເລືອດແລະຫລອກລວງຈະມີຊີວິດຢູ່ບໍ່ເຖິງເຄິ່ງຫນຶ່ງຂອງຄົນ
ອື່ນທົ່ວໄປ ແຕ່ຂ້ານ້ອຍຈະວາງໃຈໃນພຣະອົງ.

 generated on Tue Jun 17 19:01:42 2025

56 [1]ສໍາລັບຄະນະດົນຕຣີ; ສຽງເຖິງໂຈນາດ. ບົດເພງສັນຣະເສີນຂອງດາວິດ. ເມື່ອຄົນຟີລິສະຕິນຈັບລາວຢູ່ທີ່ກາດ. ຂໍຊົງເມດຕາແກ່ຂ້ານ້ອຍ,
ຂ້າແດ່ ພຣະເຈົ້າ, ເພາະຜູ້ຄົນກໍາລັງໂຈມຕີຂ້ານ້ອຍ! ບັນດາຜູ້ທີ່ຕໍ່ສູ້ຂ້ານ້ອຍໂຈມຕີຂ້ານ້ອຍຕະຫລອດວັນຍັງຄໍ່າ.[2]ພວກສັດຕຣູຂອງຂ້າ
ນ້ອຍຢຽບຍໍ່າຂ້ານ້ອຍຕະຫລອດວັນຍັງຄໍ່າ; ເພາະພວກທີ່ຕໍ່ສູ້ຂ້ານ້ອຍດ້ວຍຄວາມຈອງຫອງມີກັນຫລວງຫລາຍ.

[3]ເມື່ອຂ້ານ້ອຍຢ້ານກົວ, ຂ້ານ້ອຍຈະໄວ້ວາງໃຈໃນພຣະອົງ.[4]ໃນພຣະເຈົ້າຜູ້ຊຶ່ງຂ້ານ້ອຍສັນຣະເສີນ - ສໍາລັບສິ່ງທີ່ໄດ້ຊົງສັນຍາໄວ້; ຂ້ານ້ອຍໄວ້
ວາງໃຈ ຂ້ານ້ອຍຈະບໍ່ຢ້ານ; ພຽງແຕ່ມະນຸດຈະເຮັດຫຍັງຂ້ານ້ອຍໄດ້?
[5]ພວກເຂົາຕໍ່ສູ້ຖ້ອຍຄໍາຂອງຂ້ານ້ອຍຕະຫລອດວັນຍັງຄໍ່າ; ພວກເຂົາຄິດແຕ່ປອງຮ້າຍຂ້ານ້ອຍ.[6]ພວກເຂົາລວມຕົວກັນ, ພວກເຂົາລີ້
ຈຸ້ມກັນຊອມເບິ່ງສິ່ງທີ່ຂ້າກະທໍາ, ແລະພວກເຂົາຕິດຕາມທຸກຂັ້ນຕອນຂອງຂ້ານ້ອນ, ໄດ້ລໍຖ້າໂອກາດດີທີ່ຈະເອົາຊີວິດຂອງຂ້ານ້ອຍ.
[7]ຂໍຢ່າຊົງໃຫ້ພວກເຂົາຫນີພົ້ນຈາກການເຮັດຜິດ. ຂ້າແດ່ພຣະເຈົ້າ, ຂໍຊົງໂຍນຊົນຊາດທັງຫລາຍດ້ວຍຄວາມໂກດຮ້າຍຂອງພຣະອົງ.[8]ພຣະອົງ
ຊົງຮູ້ວ່າການເດືອດຮ້ອນຕົກຖືກຂ້ານ້ອຍ ແລະເກັບນໍ້າຕາຂອງຂ້ານ້ອຍໄວ້ໃນກວດຂອງພຣະອົງ; ນໍ້າຕານັ້ນບໍ່ໄດ້ຢູ່ໃນບັນທຶກຂອງພຣະອົງບໍ?
[9]ແລ້ວພວກສັດຕຣູຂອງຂ້ານ້ອຍ ຈະຫັນກັບໄປໃນວັນທີ່ຂ້ານ້ອຍຮ້ອງທູນຕໍ່ພຣະອົງ; ຂ້ານ້ອຍຮູ້ເຊັ່ນນີ້ວ່າ, ພຣະເຈົ້າຊົງຢູ່ຝ່າຍຂ້ານ້ອຍ.[10]ໃນພຣະ
ເຈົ້າ - ຜູ້ຊຶ່ງຂ້ານ້ອຍສັນຣະເສີນຖ້ອຍຄໍາ, ໃນພຣະຢາເວ-ຜູ້ຊຶ່ງຂ້ານ້ອຍສັນຣະເສີນຖ້ອຍຄໍາ,[11]ໃນພຣະເຈົ້າຂ້ານ້ອຍໄວ້ວາງໃຈ, ຂ້ານ້ອຍຈະບໍ່
ຢ້ານ. ຜູ້ໃດຈະເຮັດຫຍັງແກ່ຂ້ານ້ອຍໄດ້?
[12]ຂ້າແດ່ພຣະເຈົ້າ ຫນ້າທີ່ຈະເຮັດຕາມຄໍາສັນຍາຂອງຂ້ານ້ອຍທີ່ມີຕໍ່ພຣະອົງຢູ່ທີ່ຂ້ານ້ອຍ, ຂ້າແດ່ພຣະເຈົ້າ; ຂ້ານ້ອຍຖວາຍເຄື່ອງບູຊາແຫ່ງການ
ຂອບພຣະຄຸນແດ່ພຣະອົງ.[13]ເພາະພຣະອົງໄດ້ຊົງຊ່ວຍກູ້ຊີວິດຂອງຂ້ານ້ອຍ; ຈາກຄວາມຕາຍ ພຣະອົງໄດ້ຊົງຮັກສາຕີນຂອງຂ້ານ້ອຍບໍ່ໃຫ້ລົ້ມ,
ເພື່ອຂ້ານ້ອຍຈະໄດ້ດໍາເນີນຕໍ່ຫນ້າພຣະເຈົ້າໃນຄວາມສະຫວ່າງແຫ່ງການມີຊີວິດ.


generated on Tue Jun 17 19:01:42 2025

57 ສຳຫລັບນັກດົນຕຣີ; ສົ່ງເຖິງທາຫາດ. ບົດເພງສັນຣະເສີນຂອງດາວິດ. ໃນເວລາທີ່ເພິ່ນໄດ້ຫນີຈາກໂຊນ, ລີ້ຢູ່ໃນຖ້ຳ. 1 ຂ້າແດ່ພຣະເຈົ້າ, ຂໍ
ຊົງເມດຕາຂ້ານ້ອຍ, ຂໍຊົງເມດຕາຂ້ານ້ອຍ, ເພາະຂ້ານ້ອຍລີ້ພັຍໃນພຣະອົງຈົນກວ່າຄວາມທຸກຍາກລຳບາກທັງຫລາຍຜ່ານພົ້ນໄປ. ຂ້າ
ນ້ອຍຢູ່ພາຍໃຕ້ປີກແຫ່ງການຄຸ້ມຄອງຂອງພຣະອົງຈົນກວ່າຄວາມຊົ່ວຮ້າຍນີ້ຜ່ານພົ້ນໄປ.

2 ຂ້ານ້ອຍຈະຮ້ອງທູນຕໍ່ພຣະເຈົ້າຜູ້ສູງສຸດ ຕໍ່ພຣະເຈົ້າຜູ້ຊົງກະທຳທຸກສິ່ງເພື່ອຂ້ານ້ອຍ. 3 ພຣະອົງຈະຊົງສົ່ງຄວາມຊ່ວຍເຫລືອມາຈາກຟ້າສະ
ຫວັນແລະຊ່ວຍຂ້ານ້ອຍໃຫ້ພົ້ນພັຍ, ພຣະອົງຊົງໃຈຮ້າຍບັນດາຜູ້ທີ່ກົດຂີ່ຂ້ານ້ອຍ. ເສລາ ພຣະເຈົ້າຈະຊົງສົ່ງສາຍຕາແຫ່ງຄວາມຮັກແລະ
ຄວາມຊື່ສັດຂອງພຣະອົງມາຍັງຂ້ານ້ອຍ.
4 ຊີວິດຂອງຂ້ານ້ອຍຢູ່ທ່າມກາງເຫລົ່າສິງ; ຂ້ານ້ອຍຢູ່ທ່າມກາງບັນດາຜູ້ທີ່ພ້ອມຈະກັດກິນຂ້ານ້ອຍ. ຂ້ານ້ອຍຢູ່ທ່າມກາງຜູ້ຄົນທີ່ແຂ້ວຂອງເຂົາ
ເປັນຫອກແລະລູກທະນູ, ແລະບັນດາຜູ້ທີ່ລີ້ນຂອງເຂົາເປັນດາບຄົມ. 5 ຂ້ານ້ອຍ ຂໍຊົງເປັນທີ່ຍົກຍ້ອງເຫນືອຟ້າສະຫວັນ, ພຣະເຈົ້າຂອງຂ້ານ້ອຍ, ຂໍ
ສະຫງ່າຣາສີຂອງພຣະອົງຢູ່ເຫນືອທັງແຜ່ນດິນໂລກ.
6 ພວກເຂົາກາງຕາຫນ່າງດັກຈັບຂ້ານ້ອຍ; ຂ້ານ້ອຍຈຶ່ງໄດ້ທຸກໃຈ. ພວກເຂົາໄດ້ຂຸດຂຸມພາງໄວ້ຕໍ່ຫນ້າຂ້ານ້ອຍ. ແຕ່ພວກເຂົາກັບຕົກລົງໄປກາງຂຸມ
ນັ້ນເສຍເອງ! ເສລາ
7 ຂ້າແດ່ພຣະເຈົ້າ, ໃຈຂອງຂ້ານ້ອຍຫມັ້ນຄົງ, ໃຈຂອງຂ້ານ້ອຍຫມັ້ນຄົງ; ຂ້ານ້ອຍຈະຮ້ອງເພງ, ແມ່ນແລ້ວ, ຂ້ານ້ອຍຈະຮ້ອງສັນຣະເສີນ. 8 ຈິດໃຈ
ຂອງຂ້ານ້ອຍເອີຍ; ຈົ່ງຕື່ນເຖີດ, ພິນໃຫຍ່ແລະພິນເຂົາຄູ່; ຈົ່ງຕື່ນເຖີດ ຂ້ານ້ອຍຈະປຸກຕາເວັນໃຫ້ຕື່ນຂຶ້ນ ຂ້າແດ່ອົງພຣະຜູ້ເປັນເຈົ້າ.
9 ຂ້ານ້ອຍຈະຮ້ອງສັນຣະເສີນພຣະອົງ, ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ, ທ່າມກາງຊົນຊາດທັງຫລາຍ; ຂ້ານ້ອຍຈະຍ້ອງຍໍສັນຣະເສີນພຣະອົງທ່າມ
ຊົນຊາດທັງຫລາຍ. 10 ເພາະຄວາມຮັກຫມັ້ນຄົງຂອງພຣະອົງໃຫຍ່ຍິ່ງ ສູງເຖິງຟ້າສະຫວັນ; ແລະຄວາມຊື່ສັດຂອງພຣະອົງສູງເຖິງເມກ. 11 ຂ້າແດ່ພ
ຣະເຈົ້າຂໍຊົງເປັນທີ່ຍົກຍ້ອງເຫນືອຟ້າສະຫວັນ, ພຣະເຈົ້າຂອງຂ້ານ້ອຍ, ຂໍພຣະສະຫງ່າຣາສີຂອງພຣະອົງເປັນທີ່ຍົກຍ້ອງເຫນືອທົ່ວທັງແຜ່ນດິນ
ໂລກ.

 generated on Tue Jun 17 19:01:42 2025

58 ສຳຫລັບນັກດົນຕຣີ; ສົ່ງເຖິງທາເດດ. ບົດເພງສັນຣະເສີນຂອງດາວິດ.

[1]ພວກທ່ານທີ່ເປັນຜູ້ປົກຄອງເວົ້າຢ່າງຊອບທັມບໍ? ທ່ານພິພາກສາປະຊາຊົນຢ່າງທ່ຽງທັມບໍ?[2]ບໍ່ເລີຍ ທ່ານກະທຳການຊົ່ວຢູ່ໃນໃຈຂອງທ່ານ; ທ່ານ
ປ່ອຍການທາຣຸນອອກໄປທົ່ວແຜ່ນດິນດ້ວຍມືຂອງທ່ານ.

[3]ຄົນຊົ່ວກໍເຮັດຜິດມາຕະຫລອດແມ່ນຕອນທີ່ພວກເຂົາຍັງຢູ່ໃນທ້ອງ; ພວກເຂົາເຮັດຜິດໄປແລະເວົ້າຂີ້ຕົວະມາແຕ່ເກີດ.[4]ພິດຂອງພວກເຂົາເປັນດັ່ງ
ພິດງູ; ພວກເຂົາເປັນດັ່ງງູພິດຫູຫນວກທີ່ປິດຫູຂອງມັນ,[5]ທີ່ບໍ່ໃສ່ໃຈຕໍ່ສຽງຂອງຫມໍງູ ບໍ່ວ່າພວກເຂົາຈະມີຄວາມຊ່ຽວຊານພຽງໃດ, ຂ້າແດ່ພຣະ
ເຈົ້າ.
[6]ຂໍຊົງຫັກແຂ້ວໃນປາກຂອງພວກເຂົາ, ພຣະເຈົ້າ; ຂໍຊົງຫັກແຂ້ວໃຫຍ່ຂອງສິງຫນຸ່ມ, ຂ້າແດ່ພຣະຢາເວ.[7]ຂໍໃຫ້ເຂົາທັງຫລາຍສະຫລາຍໄປດັ່ງ
ນໍ້າທີ່ໄຫລອອກ; ເມື່ອພວກເຂົາຍິງລູກທະນູຂອງພວກເຂົາອອກໄປ, ຂໍໃຫ້ມັນເປັນດັ່ງລູກທະນູທີ່ໄຮ້ປະໂຫຍດ.[8]ຂໍໃຫ້ເຂົາດັ່ງຫອຍທາກທີ່ສະຫ
ລາຍແລະຕາຍໄປ, ດັ່ງເດັກແຮກເກີດທີ່ຍັງບໍ່ເຖິງກຳຫນົດເກີດຂອງຜູ້ຍິງຄົນຫນຶ່ງທີ່ບໍ່ເຄີຍໄດ້ເຫັນແສງຕາເວັນ.
[9]ກ່ອນທີ່ຫມໍ້ຂອງເຈົ້າຮູ້ສຶກຮ້ອນຈາກເປວໄຟທີ່ໄຫມ້ຕົ້ນຫນາມ, ທັງຫນາມສົດແລະຫນາມທີ່ໄຫມ້ເປັນແປວໄຟ, ພຣະອົງກໍຈະຊົງໂກດຮ້າຍເຂົາ
ໄປດ້ວຍພາຍຸຫມຸນ.[10]ຄົນຊອບທັມຈະຍິນດີເມື່ອເຂົາເຫັນການແກ້ແຄ້ນຂອງພຣະເຈົ້າ; ເຂົາຈະລ້າງຕີນຂອງເຂົາໃນເລືອດຂອງຄົນຊົ່ວ,[11]ດັ່ງນັ້ນ
ຄົນເຫລົ່ານັ້ນຈະກ່າວວ່າ, "ມີບຳເຫນັດ, ສຳຫລັບຄົນຊອບທັມ; ມີພຣະເຈົ້າຜູ້ຊົງພິພາກສາແຜ່ນດິນໂລກ."


generated on Tue Jun 17 19:01:42 2025

59 [1]ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ ຂໍຊົງຊ່ວຍກູ້ຂ້ານ້ອຍຈາກພວກສັດຕຣູຂອງຂ້ານ້ອຍ ຂໍຊົງຕັ້ງຂ້ານ້ອຍໄວ້ເທິງທີ່ສູງໄກຈາກບັນດາຜູ້ທີ່ລຸກຂຶ້ນ
ຕໍ່ສູ້ຂ້ານ້ອຍ[2]ຂໍຊົງຮັກສາຂ້ານ້ອຍໃຫ້ປອດພັຍຈາກບັນດາຜູ້ເຮັດຜິດບາບ ແລະຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກພວກຄົນທີ່ຫິວເລືອດ.

[3]ເບິ່ງເຖີດ, ເພາະພວກເຂົາລັກຊຸ້ມຖ້າເອົາຊີວິດຂອງຂ້ານ້ອຍ. ພວກຄົນເຮັດຊົ່ວທີ່ມີອຳນາດຮ່ວມຫົວກັນຕໍ່ສູ້ຂ້ານ້ອຍ, ແຕ່ບໍ່ແມ່ນເພາະເຫດການ
ບາບຂອງຂ້ານ້ອຍຫລືຄວາມຜິດຂອງຂ້ານ້ອຍ, ຂ້າແດ່ພຣະຢາເວ.[4]ພວກເຂົາຕຽມແລ່ນໃສ່ຂ້ານ້ອຍແມ່ນວ່າຂ້ານ້ອຍບໍ່ມີຄວາມຜິດ; ຂໍຊົງຕື່ນຂຶ້ນ
ແລະຊົງຊ່ວຍຂ້ານ້ອຍແລະຊົງຫລຽວເບິ່ງ.
[5]ຂ້າແດ່, ພຣະຢາເວພຣະເຈົ້າອົງຈອມໂຍທາຜູ້ຊົງເປັນພຣະເຈົ້າຂອງອິສະຣາເອນ, ຂໍຊົງລຸກຂຶ້ນແລະລົງໂທດບັນດາຊົນຊາດທັງຫມົດ; ຂໍຢ່າ
ຊົງເມດຕາຕໍ່ບັນດາຄົນທໍຣະຍົດທີ່ຊົ່ວຮ້າຍຄົນໃດເລີຍ. ເສລາ
[6]ພວກເຂົາກັບມາໃນຕອນແລງ, ພວກເຂົາເຫົ່າຫອນຄືຫມາແລະເລາະໄປຮອບເມືອງ.[7]ເບິ່ງເຖີດ, ພວກເຂົາເວົ້າບໍ່ມ່ວນອອກມາດ້ວຍປາກຂອງ
ພວກເຂົາ; ດາບກໍຢູ່ໃນຮີມສົບປາກຂອງພວກເຂົາ, ເພາະພວກເຂົາເວົ້າວ່າ, "ໃຜຈະໄດ້ຍິນພວກເຮົາ?"
[8]ຂ້າແດ່ພຣະອົງ, ພຣະຢາເວ, ພຣະອົງຊົງຫົວຂວັນພວກເຂົາ, ພຣະອົງຊົງຫົວເຍາະເຍີ້ຍບັນດາຊົນຊາດທັງຫມົດ.[9]ຂ້າແດ່ພຣະເຈົ້າ,
ພຣະອົງຊົງເປັນກຳລັງຂອງຂ້ານ້ອຍ; ຂ້ານ້ອຍຈະເຝົ້າເບິ່ງພຣະອົງ ພຣະອົງຊົງເປັນປ້ອມປ້ອງກັນທີ່ສູງຂອງຂ້ານ້ອຍ.
[10]ພຣະເຈົ້າຂອງຂ້ານ້ອຍ ຈະຊົງມາພົບຂ້ານ້ອຍດ້ວຍຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ; ພຣະເຈົ້າຈະຊົງໃຫ້ຂ້ານ້ອຍເບິ່ງເຫັນຄວາມປຣາ
ຖນາຂອງຂ້ານ້ອຍ ຢູ່ເທິງພວກສັດຕຣູຂອງຂ້ານ້ອຍ. ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຜູ້ຊົງເປັນໂລ້ຂອງຂ້ານ້ອຍທັງຫລາຍ[11]ຂໍຢ່າຊົງສັງຫານພວກ
ເຂົາເສຍ, ຫລືຢ້ານວ່າຊົນຊາດຂອງຂ້ານ້ອຍຈະລືມ. ຂໍຊົງໃຫ້ພວກເຂົາກະແຈກກະຈາຍໄປດ້ວຍພະລັງອຳນາດຂອງພຣະອົງ ແລະຊົງໃຫ້ພວກ
ເຂົາລົ້ມລົງ.
[12]ເພາະບາບຈາກປາກຂອງພວກເຂົາ ແລະເພາະຖ້ອຍຄຳຈາກຮີມສົບປາກຂອງພວກເຂົາ, ຂໍຊົງໃຫ້ພວກເຂົາຕິດກັບໂດຍຄວາມໂອ້ອວດຂອງ
ພວກເຂົາ, ແລະເພາະບັນດາການແຊ່ງສາບແລະການຂີ້ຕົວະພວກເຂົາເປົ້ງອອກມານັ້ນ.[13]ຂໍຊົງເຜົາຜານພວກເຂົາໂດຍຄວາມໃຈຮ້າຍ, ຂໍຊົງ
ເຜົາຜານພວກເຂົາຈົນພວກເຂົາຈະບໍ່ມີເຫລືອອີກຕໍ່ໄປ; ຂໍຊົງໃຫ້ພວກເຂົາຮູ້ວ່າພຣະເຈົ້າຊົງປົກຄອງເຫນືອຢາໂຄບແລະຈົນເຖິງທີ່ສຸດປາຍແຜ່ນ
ດິນໂລກ. ເສ ລາ
[14]ພວກເຂົາກັບມາໃນຕອນແລງ, ພວກເຂົາເຫົ່າຫອນຄືຫມາແລະເລາະໄປຮອບເມືອງ.[15]ເຂົາເລາະລຽບເບິ່ງຫາອາຫານ ແລະຖ້າພວກເຂົາບໍ່ໄດ້
ກິນອີ່ມກໍຂູ່ເຫົ່າເຫມືອນຫມາ.
[16]ແຕ່ຂ້ານ້ອຍຈະຮ້ອງເພງເຖິງພຣະກຳລັງຂອງພຣະອົງ, ແລະໃນຍາມເຊົ້າ ຂ້ານ້ອຍຈະຮ້ອງເພງກ່ຽວກັບຄວາມຮັກຫມັ້ນຄົງຂອງພຣະອົງ ເພາະ
ພຣະອົງຊົງເປັນປ້ອມປ້ອງກັນທີ່ສູງຂອງຂ້ານ້ອຍແລະຊົງເປັນທີ່ລີ້ພັຍໃນວັນແຫ່ງຄວາມທຸກຍາກຂອງຂ້ານ້ອຍ.[17]ຂ້າແດ່, ພຣະກຳລັງຂອງພຣະອົງ,
ຂ້ານ້ອຍຈະຮ້ອງສັນຣະເສີນແດ່ພຣະອົງ ເພາະພຣະເຈົ້າຊົງເປັນປ້ອມປ້ອງກັນທີ່ສູງ, ຊົງເປັນພຣະເຈົ້າແຫ່ງຄວາມຊື່ສັດແຫ່ງຄຳສັນຍາຂອງຂ້າ
ນ້ອຍ.


generated on Tue Jun 17 19:01:42 2025

60 [1]ສຳຫລັບນັກດົນຕຣີ; ສົ່ງເຖິງຊູຊານ ເອດູດ. ຄຳແນະນຳຂອງດາວິດ, ເພື່ອການສັ່ງສອນ. ໃນເວລາທີ່ລາວໄດ້ຕໍ່ສູ້ກັບ ອາລາມ ນາຮາລຽມ
ແລະກັບ ອາລາມ ໂຊບາ, ແລະ ຈອດ ກັບມາແລະຂ້າສິບສອງພັນຄົນທີ່ຮ່ອມພູເກືອ. ຂ້າແດ່ພຣະເຈົ້າ, ພຣະອົງຊົງປະຖິ້ມຂ້ານ້ອຍທັງ
ຫລາຍ; ພຣະອົງຊົງທຳລາຍແນວປ້ອງກັນຂອງຂ້ານ້ອຍທັງຫລາຍ; ດ້ວຍຄວາມໃຈຮ້າຍ; ຟື້ນຄືນຂ້ານ້ອຍຂຶ້ນໃຫມ່.

[2]ພຣະອົງໄດ້ໂກດຮ້າຍພວກຂ້ານ້ອຍ; ຂໍຊົງຮື້ຟື້ນຂ້ານ້ອຍທັງຫລາຍອີກຄັ້ງເຖີດ; ພຣະອົງໄດ້ຊົງເຮັດໃຫ້ແຜ່ນດິນສັ່ນສະເທືອນ, ພຣະອົງໄດ້ຊົງ
ຈີກມັນອອກຈາກກັນ ຂໍຊົງຮັກສາຮອຍແຍກນັ້ນເຖີດ ເພາະມັນສັ່ນສະເທືອນ.[3]ພຣະອົງໄດ້ຊົງເຮັດໃຫ້ປະຊາຊົນຂອງພຣະອົງເຫັນບັນດາສິ່ງ
ທີ່ຍາກລຳບາກ; ພຣະອົງໄດ້ຊົງໃຫ້ຂ້ານ້ອຍທັງຫລາຍດື່ມເຫລົ້າອະງຸ່ນແຫ່ງຄວາມໂຊເຊ.
[4]ສຳລັບບັນດາຜູ້ທີ່ຖວາຍກຽຕແດ່ພຣະອົງ, ພຣະອົງຊົງຕັ້ງທຸງຫນຶ່ງໄວ້ເພື່ອສະແດງເຖິງການຕໍ່ຕ້ານບັນດາຜູ້ຖືທະນູ. ເສລາ[5]ເພື່ອບັນດາຜູ້ທີ່ພຣະ
ອົງຊົງຮັກຈະໄດ້ຮັບການຊ່ວຍກູ້, ຂໍຊົງຊ່ວຍເຫລືອຂ້ານ້ອຍທັງຫລາຍດ້ວຍມືຂວາຂອງພຣະອົງແລະຂໍຊົງຕອບຂ້ານ້ອຍ.
[6]ພຣະເຈົ້າກ່າວດ້ວຍຄວາມບໍຣິສຸດຂອງພຣະອົງວ່າ, "ເຮົາຈະຍິນດີ; ເຮົາຈະແບ່ງເມືອງ ຊີເຄມ ແລະແບ່ງຮ່ອມພູເຂົາ ເມືອງສຸໂຄດອອກ.[7]ກິເລ
ອາດເປັນຂອງເຮົາ ແລະມານາເຊເປັນຂອງເຮົາ; ເອຟຣາອິມກໍເປັນຫມວກປ້ອງກັນຫົວຂອງເຮົາ; ຢູດາຍເປັນຕະບອງແຫ່ງຣາຊອຳນາດຂອງ
ເຮົາ.
[8]ໂມອາບເປັນອ່າງລ້າງສ່ວຍຂອງເຮົາ; ເຮົາໂຍນເກີບຂອງເຮົາລົງເທິງເອໂດມ; ເຮົາຈະໂຫ່ຮ້ອງດ້ວຍຄວາມມີຊັຍເຫນືອຟີລິສະຕິນ."[9]ຜູ້ໃດຈະນຳ
ຂ້ານ້ອຍເຂົ້າໄປຍັງເມືອງທີ່ແຂງແກ່ນ? ຜູ້ໃດຈະນຳຂ້ານ້ອຍໄປຍັງເອໂດມ?
[10]ຂ້າແດ່ພຣະເຈົ້າ ແຕ່ພຣະອົງບໍ່ໄດ້ຊົງປະຕິເສດຂ້ານ້ອຍທັງຫລາຍແລ້ວບໍ? ພຣະອົງຈະບໍ່ຊົງໄປຮົບກັບກອງທັບຂອງພວກຂ້ານ້ອຍທັງ
ຫລາຍອີກບໍ?.[11]ຂໍຊົງໂຜດປຣະທານຄວາມຊ່ວຍເຫລືອແກ່ຂ້ານ້ອຍທັງຫລາຍເພື່ອຕໍ່ຕ້ານສັດຕຣູ, ເພາະຄວາມຊ່ວຍເຫລືອຂອງມະນຸດໃຊ້ການ
ຫຍັງບໍ່ໄດ້.[12]ເຮົາຈະມີຊັຍຊະນະດ້ວຍຄວາມຊ່ວຍເຫລືອຂອງພຣະເຈົ້າ; ພຣະອົງຈະຊົງຢຽບພວກສັດຕຣູຂອງເຮົາລົງ.

 generated on Tue Jun 17 19:01:42 2025

61 [1]ສຳລັບນັກດົນຕຣີ; ກ່ຽວກັບເຄື່ອງຫລິ້ນດົນຕຣີ. ບົດເພງສັນຣະເສີນຂອງດາວິດ. ຂໍຊົງຟັງສຽງຮ້ອງຫາຂອງຂ້ານ້ອຍ, ຂ້າແດ່ພຣະເຈົ້າ; ຂໍ
ຊົງຟັງຄຳພາວັນນາອະທິຖານຂອງຂ້ານ້ອຍ.[2]ຂ້ານ້ອຍຈະຮ້ອງຫາພຣະອົງຈາກທີ່ສຸດປາຍແຜ່ນດິນໂລກເມື່ອຈິດໃຈຂອງຂ້ານ້ອຍອ່ອນແຮງ
ໄປ; ຂໍຊົງນຳຂ້ານ້ອຍໄປຍັງໂງ່ນຫີນທີ່ສູງກວ່າຂ້ານ້ອຍ.[3]ເພາະພຣະອົງຊົງເປັນທີ່ລີ້ພັຍສຳລັບຂ້ານ້ອຍ, ຊົງເປັນຫໍຄອຍແຂງແກ່ນຈາກສັດຕຣູພວກ
ນັ້ນ.

[4]ຂໍໃຫ້ຂ້ານ້ອຍຢູ່ໃນພຣະວິຫານຂອງພຣະອົງເປັນນິດ, ຂໍໃຫ້ຂ້ານ້ອຍລີ້ພັຍຢູ່ພາຍໃຕ້ທີ່ກຳບັງແຫ່ງປີກຂອງພຣະອົງ. ເສລາ[5]ຂ້າແດ່ພຣະເຈົ້າ,
ເພາະພຣະອົງຊົງຟັງຄຳສັນຍາຂອງຂ້ານ້ອຍ, ພຣະອົງໄດ້ຊົງປຣະທານມໍຣະດົກຂອງຜູ້ທີ່ຍົກຍ້ອງພຣະນາມຊື່ຂອງພຣະອົງແກ່ຂ້ານ້ອຍ.
[6]ພຣະອົງຈະຊົງຕື່ມອາຍຸຍືນຍາວຂອງພະຣາຊາ; ປີເດືອນຂອງທ່ານຈະຍືນນານໄປຫລາຍຊົ່ວອາຍຸ.[7]ທ່ານຈະດຳຣົງຢູ່ຊ້ອງຫນ້າຂອງພຣະເຈົ້າເປັນ
ນິຣັນ.
[8]ຂ້ານ້ອຍຈະຮ້ອງສັນຣະເສີນແດ່ພຣະນາມຊື່ຂອງພຣະອົງເປັນນິດ ເພື່ອຂ້ານ້ອຍຈະໄດ້ເຮັດຕາມຄຳສັນຍາຂອງຂ້ານ້ອຍທຸກວັນ.

 generated on Tue Jun 17 19:01:42 2025

62 [1]ສຳລັບນັກດົນຕຣີ; ຫລັງຈາກລັກສະນະຂອງ ຂ້ານ້ອຍສະງົບຄອຍພຣະເຈົ້າເທົ່ານັ້ນ; ຄວາມພົ້ນຂອງຂ້ານ້ອຍມາຈາກພຣະອົງ[2]ພຣະອົງເທົ່າ
ນັ້ນຊົງເປັນສີລາແຫ່ງຄວາມພົ້ນຂອງຂ້ານ້ອຍຊົງເປັນປ້ອມປ້ອງກັນທີ່ສູງຂອງຂ້ານ້ອຍ ຂ້ານ້ອຍຈະບໍ່ຫວັ່ນໄຫວເລີຍ.

[3]ດົນນານປານໃດ, ພວກເຈົ້າທັງຫມົດ, ຈະໂຈມຕີຄົນຫນຶ່ງ, ຈົນເຈົ້າສາມາດຈັບເຂົາລົງດັ່ງກຳແພງທີ່ເພພັງ?[4]ພວກເຂົາປຶກສາກັບທ່ານ ພຽງເພື່ອ
ຈະພາທ່ານລົງມາຈາກຕຳແຫນ່ງອັນຊົງກຽດຂອງທ່ານ; ພວກເຂົາຮັກໃນການເຫລົ່າເລື່ອງຂີ້ຕົວະ, ພວກເຂົາອວຍພອນທ່ານດ້ວຍປາກຂອງພວກ
ເຂົາ ແຕ່ໃນໃຈຂອງພວກເຂົາ ພວກເຂົາປ້ອຍດ່າທ່ານ. ເສລາ
[5]ຂ້ານ້ອຍສະງົບຄອຍພຣະເຈົ້າເທົ່ານັ້ນ; ເພາະຄວາມຫວັງຂອງນ້ອຍຕັ້ງຫມັ້ນຢູ່ເທິງພຣະອົງ.[6]ພຣະອົງເທົ່ານັ້ນຊົງເປັນສີລາແລະຄວາມພົ້ນຂອງ
ຂ້ານ້ອຍ; ພຣະອົງຊົງເປັນປ້ອມປ້ອງກັນນທີ່ສູງຂອງຂ້ານ້ອຍ ຂ້ານ້ອຍຈະບໍ່ຫວັ່ນໄຫວ.
[7]ດ້ວຍພຣະເຈົ້າຊົງເປັນຄວາມພົ້ນແລະກຽດຂອງຂ້ານ້ອຍ; ສີລາແຫ່ງກຳລັງຂອງຂ້ານ້ອຍແລະທີ່ລີ້ພັຍຂອງຂ້ານ້ອຍຢູ່ໃນພຣະເຈົ້າ ປະຊາຊົນ
ເອີຍ.[8]ຈົ່ງວາງໃຈໃນພຣະອົງຕະຫລອດເວລາ, ປະຊາຊົນຂອງພຣະອົງ, ຈົ່ງລະບາຍຄວາມໃນໃຈຂອງທ່ານຕໍ່ພຣະອົງ; ພຣະເຈົ້າຊົງເປັນທີ່ລີ້ພັຍ
ສຳລັບເຮົາ. ເສລາ
[9]ແນ່ນອນ ບັນດາຄົນຖານະຕ່ຳກໍອານິຈັງ ບັນດາຄົນຖານະສູງກໍເປັນເລື່ອງບໍ່ຈິງ; ພວກເຂົາແທບບໍ່ມີນ້ຳຫນັກເລີຍເທິງຕາຊັ່ງ; ເມື່ອໄດ້ຊັ່ງພ້ອມກັນ,
ພວກເຂົາກໍເບົາກ່າວລົມຫາຍໃຈ.[10]ຢ່າວາງໃຈໃນການບີບບັງຄັບຫລືການປຸ້ນ; ແລະຢ່າຫວັງລົມໆ ແລ້ງໆ, ໃນຄວາມລໍ້າລວຍເພາະສິ່ງເຫລົ່ານັ້ນ
ຈະບໍ່ເກີດຜົນ; ຢ່າປັກໃຈຂອງເຈົ້າເທິງສິ່ງເຫລົ່ານັ້ນ.
[11]ພຣະເຈົ້າໄດ້ກ່າວວ່າ, ຂ້ານ້ອຍໄດ້ຍິນພຣະເຈົ້າກ່າວຫລາຍກວ່າຫນຶ່ງຄັ້ງ: ວ່າຣິດອຳນາດເປັນຂອງພຣະເຈົ້າ.[12]ຂ້າແດ່ອົງພຣະຜູ້ເປັນເຈົ້າ,
ຄວາມຊື່ສັດແຫ່ງພັນທະສັນຍາເປັນຂອງພຣະອົງ, ເພາະພຣະອົງຊົງຕອບແທນທຸກຄົນຕາມສິ່ງທີ່ເຂົາເຈົ້າໄດ້ເຮັດໄວ້.


generated on Tue Jun 17 19:01:42 2025

63 [1]ບົດເພງສັນຣະເສີນຂອງດາວິດ, ໃນເວລາທີ່ເພິ່ນກຳລັງຢູ່ໃນຄວາມມືດມິດຂອງຢູດາ. ຂ້າແດ່ພຣະເຈົ້າ, ພຣະອົງຊົງເປັນພຣະເຈົ້າຂອງຂ້າ
ນ້ອຍ! ຂ້ານ້ອຍຈະສະແຫວງຫາພຣະອົງຢ່າງຮ້ອນຮົນ, ຈິດໃຈຂອງຂ້ານ້ອຍກະຫາຍຫາພຣະອົງ, ແລະເນື້ອຫນັງຂອງຂ້ານ້ອຍປຣາຖນາ
ຫາພຣະອົງໃນດິນແດນທີ່ແຫ້ງແລ້ງແລະອ່ອນລ້າທີ່ຂາດນ້ຳລໍ້ລ້ຽງ.
[2]ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ຫລຽວເບິ່ງພຣະອົງໃນພຣະວິຫານເພື່ອເຫັນຣິດອຳ
ນາດແລະພຣະສະຫງ່າຣາສີຂອງພຣະອົງ.

[3]ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງດີກວ່າຊີວິດ, ຮີມສົບປາກຂອງຂ້ານ້ອຍຈະສັນຣະເສີນພຣະອົງ.
[4]ເຊັ່ນນັ້ນແຫລະ ຂ້ານ້ອຍຈະ
ຖວາຍຄຳໂມທະນາແດ່ພຣະອົງໃນຂະນະທີ່ຂ້ານ້ອຍມີຊີວິດຢູ່; ຂ້ານ້ອຍຈະຊູມືຂອງຂ້ານ້ອຍໃນພຣະນາມຊື່ຂອງພຣະອົງ.
[5]ຊຶ່ງຈະເປັນເຫມືອນຂ້ານ້ອຍ ໄດ້ກິນມື້ທີ່ມີໄຂກະດູກແລະໄຂມັນ; ຮີມສົບປາກຂອງຂ້ານ້ອຍຈະສັນຣະເສີນພຣະອົງດ້ວຍຄວາມຊື່ນບານ,
[6]ເມື່ອຂ້າ
ນ້ອຍລະນຶກເຖິງພຣະອົງ,ໃນຂະນະທີ່ຢູ່ເທິງທີ່ນອນແລະຄິດເຖິງພຣະອົງຕະຫລອດທັງຄືນ.
[7]ເພາະພຣະອົງໄດ້ຊົງເປັນຄວາມຊ່ວຍເຫລືອຂອງຂ້ານ້ອຍ, ແລະຂ້ານ້ອຍຈະຊື່ນຊົມຍິນດີພາຍໃຕ້ຮົ່ມປີກຂອງພຣະອົງ.
[8]ຂ້ານ້ອຍຕິດພັນຢູ່ກັບພ
ຣະອົງ; ມືຂວາຂອງພຣະອົງຊົງຮັກສາຂ້ານ້ອຍໄວ້ໃຫ້ປອດພັຍ.
[9]ແຕ່ບັນດາຜູ້ທີ່ຫາທາງທຳລາຍຊີວິດຂອງຂ້ານ້ອຍຈະລົງໄປຍັງທີ່ເລິກຂອງແຜ່ນດິນໂລກ;
[10]ພວກເຂົາຈະຖືກມອບໃຫ້ແກ່ບັນດາພວກທີ່ມືຂອງພວກ
ເຂົາຖືດາບ, ແລະພວກເຂົາຈະກາຍເປັນອາຫານຂອງພວກຫມາຈິ້ງຈອກ.
[11]ແຕ່ພະຣາຊາຈະຊົງຍິນດີໃນພຣະເຈົ້າ, ທຸກຄົນທີ່ສາບານໂດຍອ້າງພຣະເຈົ້າຈະພາກພູມໃຈໃນພຣະອົງ, ແຕ່ປາກຂອງບັນດາຄົນເວົ້າຂີ້ຕົວະຈະ
ຖືກງັບໄວ້.

 generated on Tue Jun 17 19:01:42 2025

64 ສຳລັບນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ.[1]ຂໍຊົງຟັງສຽງຂອງຂ້ານ້ອຍ, ຂ້າແດ່ພຣະເຈົ້າ, ຂໍຊົງຟັງສຽງຮ້ອງທຸກຂອງຂ້ານ້ອຍ; ຂໍຊົງ
ປົກປ້ອງຊີວິດຂອງຂ້ານ້ອຍໄວ້ຈາກຄວາມຢ້ານກົວພວກສັດຕຣູຂອງຂ້ານ້ອຍ.[2]ຂໍຊົງເຊື່ອງຂ້ານ້ອຍໄວ້ຈາກການວາງແຜນລັບຂອງພວກຄົນ
ເຮັດຊົ່ວ, ຈາກການເຈຣະຈາຂອງບັນດາຜູ້ເຮັດຄວາມຜິດບາບ.

[3]ພວກເຂົາໄດ້ຝຶກຝົນລີ້ນຂອງພວກເຂົາຄົມດັ່ງດາບ; ພວກເຂົາໄດ້ເອົາຄຳຂົມຂື່ນເລັງມາຢ່າງລູກທະນູ, ມີຄຳເວົ້າທີ່ຂົມຂື່ນ,[4]ເພື່ອພວກເຂົາຈະໄດ້
ຍິງບາງຄົນທີ່ບໍ່ມີຄວາມຜິດຈາກທີ່ລັບ; ພວກເຂົາຍິງໃສ່ເຂົາໃນທັນທີແລະບໍ່ຢ້ານກົວຫຍັງເລີຍ.
[5]ພວກເຂົາໃຫ້ກຳລັງໃຈພວກເຂົາເອງໃນແຜນຊົ່ວ; ພວກເຂົາສຸມຫົວເວົ້າກັນຢ່າງລັບໆເພື່ອວາງກັບດັກ; ພວກເຂົາເວົ້າວ່າ, "ໃຜຈະເຫັນເຮົາ
ໄດ້?"[6]ພວກເຂົາຄິດຄົ້ນແຜນຊົ່ວທັງຫລາຍຂຶ້ນມາ; "ເຮົາເຮັດສຳເລັດແລ້ວ" ພວກເຂົາເວົ້າວ່າ." ເປັນແຜນການທີ່ດີເລີດ ຄວາມຄິດພາຍໃນແລະ
ຈິດໃຈຂອງມະນຸດນັ້ນຊ່າງເລິກລັບບໍ່ມີໃຜຢັ່ງຮູ້ໄດ້ເລີຍ.
[7]ແຕ່ພຣະເຈົ້າຊົງຍິງທະນູໃສ່ພວກເຂົາ, ເຂົາຈະບາດເຈັບດ້ວຍທະນູຂອງພຣະອົງ ໃນທັນທີ.[8]ພວກເຂົາຈະຖືກເຮັດໃຫ້ສະດຸດ, ໃນເມື່ອລີ້ນຂອງ
ພວກເຂົາຕໍ່ສູ້ພວກເຂົາເອງ, ທຸກຄົນທີ່ເຫັນພວກເຂົາພາກັນແກ່ງຫົວ.[9]ແລ້ວປະຊາຊົນທັງຫມົດຈະຢ້ານກົວ ແລະຈະປະກາດເຖິງພ
ຣະຣາຊກິດຂອງພຣະເຈົ້າ. ພວກເຂົາຈະຄິດຢ່າງສະຫລາດເຖິງສິ່ງຊຶ່ງພຣະອົາໄດ້ຊົງກະທຳ.
[10]ຄົນຊອບທັມຍິນດີໃນພຣະຢາເວແລະຈະລີ້ພັຍໃນພຣະອົງ; ຄົນທີ່ມີໃຈທ່ຽງທັມທັງຫມົດຈະພາກພູມໃຈໃນພຣະອົງ.

 generated on Tue Jun 17 19:01:42 2025

65 [1]ສຳລັບນັກດົນຕຣີ. ບົດເພງສັນຣະເສີນ. ບົດເພງຂອງດາວິດ.[2]ຂ້າແດ່ພຣະເຈົ້າ, ພຣະເຈົ້າໃນຊີໂອນ, ການສັນຣະເສີນຂອງຂ້ານ້ອຍທັງ
ຫລາຍລໍຄອຍຖ້າພຣະອົງ; ຄຳສັນຍານຂອງຂ້ານ້ອຍທັງຫລາຍຈະມີຕໍ່ພຣະອົງ. ພຣະອົງຜູ້ຊົງຕອບຄຳພາວັນນາອະທິຖານ, ເນື້ອຫນັງທັງ
ຫມົດຈະມາຍັງພຣະອົງ.[3]ຄວາມຜິດບາບຊະນະເຫນືອຂ້ານ້ອຍທັງຫລາຍ; ສ່ວນຄວາມຜິດບາບຂອງຂ້ານ້ອຍທັງຫລາຍ ພຣະອົງກໍຊົງອະພັຍ
ໃຫ້ຫມົດສິ້ນ.

[4]ຜູ້ທີ່ພຣະອົງຊົງເລືອກແລະນຳມາໃກ້ພຣະອົງກໍເປັນສຸກ ເພື່ອເຂົາຈະໄດ້ຢູ່ໃນບໍຣິເວນທີ່ປຣະທັບຂອງພຣະອົງ. ຂ້ານ້ອຍທັງຫລາຍຈະອີ່ມບໍຣິບູນ
ດ້ວຍຂອງດີແຫ່ງພຣະວິຫານຂອງພຣະອົງ ພຣະວິຫານສັກສິດຂອງພຣະອົງ ໂອຂ້າແດ່ພຣະເຈົ້າ, ແຫ່ງຄວາມພົ້ນຂອງຂ້ານ້ອຍທັງຫລາຍ.
[5]ພຣະອົງຈະຊົງຕອບຂ້ານ້ອຍທັງຫລາຍດ້ວຍຄວາມຊອບທັມ ໂດຍການກະທຳທີ່ຫນ້າອັສະຈັນ, ພຣະອົງຜູ້ຊົງເປັນຄວາມຫມັ້ນໃຈຂອງບັນດາທີ່
ສຸດປາຍທັງຫມົດ ຂອງແຜ່ນດິນໂລກ ແລະຂອງຄົນທີ່ຢູ່ໄກຟາກທະເລ.
[6]ເພາະພຣະອົງຜູ້ໄດ້ຊົງສ້າງພູເຂົາໃຫ້ຫມັ້ນຄົງ, ພຣະອົງຜູ້ຊົງຄາດດ້ວຍພຣະກຳລັງ.[7]ຄືພຣະອົງຜູ້ຊົງລະງັບສຽງອຶກກະທຶກຂອງທະເລ,
ສຽງອຶກກະທຶກຂອງຄື້ນທະເລອັນປັ່ນປ່ວນສະຫງົບລົງ, ສຽງອຶກກະທຶກຂອງປະຊາຊົນທັງຫລາຍມິດງຽບ.
[8]ບັນດາຜູ້ຢູ່ໃນທີ່ໄກຂອງສິ້ນແຜ່ນດິນໂລກກໍຢ້ານກົວຕໍ່ຂໍ້ພິສູດແຫ່ງພຣະຣາຊກິດຂອງພຣະອົງ; ພຣະອົງຊົງກະທຳໃຫ້ຕາເວັນອອກແລະຕາເວັນ
ຕົກຊື່ນບານ.[9]ພຣະອົງສະເດັດມາຊົງຊ່ວຍເຫລືອແຜ່ນດິນໂລກ; ຊົງຫົດນ້ຳໃຫ້ແກ່ມັນ; ພຣະອົງຊົງກະທຳໃຫ້ອຸດົມຍິ່ງດ້ວຍແມ່ນ້ຳຂອງພຣະເຈົ້າ;
ຊຶ່ງມີນ້ຳເຕັມ ພຣະອົງຊົງຈັດຫາເຂົ້າໃຫ້ແກ່ມະນຸດເມື່ອຕອນທີ່ພຣະອົງໄດ້ຊົງຈັດຕຽມແຜ່ນດິນໂລກໄວ້.
[10]ພຣະອົງຊົງຫົດນ້ຳຕາມຮອຍໄຖຂອງມັນຢ່າງອຸດົມສົມບູນ; ແລະໃຫ້ຮອຍໄຖນັ້ນຮາບລົງ; ພຣະອົງຊົງເຮັດໃຫ້ມັນອ່ອນນຸ້ມດ້ວຍເມັດຝົນ; ພຣະ
ອົງຊົງອວຍພອນເມັດທີ່ງອກຂຶ້ນເທິງດິນ.[11]ພຣະອົງຊົງໃສ່ມົງກຸດປີເດືອນດ້ວຍຄວາມດີຂອງພຣະອົງ; ຫົນທາງທັງຫລາຍທີ່ຣົຖມ້າຂອງພຣະອົງ
ຜ່ານໄປກໍມີຄວາມໄພບູນຢົດລົງມາເທິງແຜ່ນດິນໂລກ.[12]ທົ່ງຫຍ້າໃນຖິ່ນແຫ້ງແລ້ງກັນດານກໍມີນ້ຳຫມອກຍ້ອຍ, ແລະເນີນເຂົາທັງຫລາຍຖືກປົກ
ຄຸມດ້ວຍຄວາມຍິນດີ.
[13]ທົ່ງຫຍ້າທັງຫລາຍຖືກຄຸມດ້ວຍຝູງແບ້ແກະ;, ຮ່ວມພູທັງຫລາຍຕ່າງຖືກປົກຄຸມໄປດ້ວຍເຂົ້າ ພວກເຂົາໂຫ່ຮ້ອງດ້ວຍຄວາມຊື່ນບານ ແລະພວກ
ເຂົາຮ້ອງລຳທຳເພງ.


generated on Tue Jun 17 19:01:42 2025

66 ສຳລັບນັກດົນຕຣີ. ບົດເພງ, ສັນຣະເສີນ.[1]ແຜ່ນດິນໂລກທັງຫມົດເອີຍ, ຈົ່ງເຮັດສຽງຊື່ນບານແດ່ພຣະເຈົ້າ;[2]ຈົ່ງຮ້ອງເພງເຖິງພຣະສີຣິແຫ່ງພ
ຣະນາມຊື່ພຣະອົງ; ຈົ່ງເຮັດໃຫ້ການສັນຣະເສີນຂອງພຣະອົງມີສະງ່າຣາສີ.

[3]ຈົ່ງທູນຕໍ່ພຣະເຈົ້າວ່າ "ບັນດາການກະທຳຂອງພຣະອົງນັ້ນຫນ້າອັສະຈັນພຽງໃດ ໂດຍຄວາມຍິ່ງໃຫຍ່ແຫ່ງຣິທານຸພາບຂອງພຣະອົງ, ບັນດາສັດ
ຕຣູຂອງພຣະອົງຈະຍອມຕໍ່ພຣະອົງ.[4]ແຜ່ນດິນໂລກທັງຫມົດຈະນະມັສະການພຣະອົງ, ແລະຈະຮ້ອງເພງແດ່ພຣະເຈົ້າ, ພວກເຂົາຈະຮ້ອງເພງແດ່
ພຣະນາມຊື່ຂອງພຣະອົງ ເສລາ* .
[5]ຈົ່ງມາແລະເບິ່ງການກະທຳຂອງພຣະເຈົ້າ; ກິຈະການຂອງພຣະອົງທີ່ຊົງກະທຳນັ້ນອັສະຈັນທ່າມກາງບັນດາລູກຂອງມະນຸດ.[6]ພຣະອົງຊົງປ່ຽນທະ
ເລໃຫ້ເປັນດິນແຫ້ງ; ພວກເຂົາໄດ້ຍ່າງຂ້ວາມຜ່ານແມ່ນ້ຳໄປ ທີ່ນັ້ນເຮົາໄດ້ຍິນດີໃນພຣະອົງ.[7]ພຣະອົງຊົງປົກຄອງດ້ວຍຣິທານຸພາບຂອງພຣະອົງ
ເປັນນິດ; ສາຍຕາຂອງພຣະອົງເຝົ້າສັງເກດບັນດາປະຊາຊາດທັງຫລາຍຢູ່ ຢ່າໃຫ້ພວກກະບົດຍົກຍ້ອງຕົນເອງເລີຍ. ເສລາ
[8]ປະຊາຊົນເອີຍ ຈົ່ງຖວາຍຄຳຍ້ອງຍໍສັນຣະເສີນແດ່ພຣະເຈົ້າ, ຈົ່ງໃຫ້ສຽງສັນຣະເສີນພຣະອົງເປັນທີ່ໄດ້ຍິນ.[9]ພຣະອົງຊົງໃຫ້ເຮົາຢູ່ທ່າມກາງຄົນ
ເປັນແລະບໍ່ຊົງຍອມໃຫ້ຕີນຂອງເຮົາພະລາດລົ້ມ, ຂ້າແດ່ພຣະເຈົ້າເພາະ ພຣະອົງຊົງລອງໃຈຂ້ານ້ອຍທັງຫລາຍ.
[10]ຂ້າແດ່, ພຣະເຈົ້າ, ພຣະອົງຊົງທົດສອບພວກຂ້ານ້ອຍ; ດັ່ງທົດສອບເງິນ.[11]ພຣະອົງໄດ້ຊົງນຳຂ້ານ້ອຍທັງຫລາຍເຂົ້າໄປໃນຕາຂ່າຍ; ພຣະອົງໄດ້
ຊົງວາງພາຣະຫນັກໄວ້ເທິງຫລັງຂ້ານ້ອຍທັງຫລາຍ.[12]ພຣະອົງຊົງໃຫ້ຜູ້ຄົນຂັບຣົຖແລ່ນທັບຫົວຂອງຂ້ານ້ອຍທັງຫລາຍ; ພວກຂ້ານ້ອຍຕ້ອງລຸຍນ້ຳ
ລຸຍໄຟ, ແຕ່ພຣະອົງໄດ້ຊົງນຳຂ້ານ້ອຍທັງຫລາຍເຂົ້າມາສູ່ທີ່ກວ້າງໃຫຍ່.
[13]ຂ້ານ້ອຍຈະມາຍັງພຣະວິຫານຂອງພຣະອົງ; ພ້ອມດ້ວຍເຄື່ອງເຜົາບູຊາ ຂ້ານ້ອຍຈະກ່າວຄຳສັນຍາຕໍ່ພຣະອົງ[14]ຊຶ່ງຣີມສົບປາກຂອງຂ້ານ້ອຍໄດ້
ສັນຍາແລະປາກຂອງຂ້ານ້ອຍໄດ້ກ່າວໄວ້ເມື່ອຕອນທີ່ຂ້ານ້ອຍໄດ້ຕົກຢູ່ໃນຄວາມທຸກໃຈ.[15]ຂ້ານ້ອຍຈະຖວາຍເຄື່ອງເຜົາບູຊາແດ່ພຣະອົງທີ່ມີໄຂ
ມັນສັດພ້ອມກັບກິ່ນຫອມຂອງບັນດາແກະໂຕຜູ້; ຂ້ານ້ອຍຈະຖວາຍດ້ວຍງົວແລະແບ້ທັງຫລາຍ. ເສລາ
[16]ບັນດາຜູ້ທີ່ຢຳເກງພຣະເຈົ້າເອີຍ, ຈົ່ງມາແລະຟັງເຖີດ, ແລະເຮົາຈະປະກາດເຖິງສິ່ງທີ່ພຣະອົງໄດ້ຊົງກະທຳເພື່ອຈິດໃຈຂອງເຮົາ.[17]ເຮົາໄດ້ຮ້ອງຕໍ່
ພຣະອົງດ້ວຍປາກເຮົາ, ແລະພຣະອົງໄດ້ຮັບການສັນຣະເສີນດ້ວຍລີ້ນຂອງເຮົາ.[18]ຖ້າເຮົາໄດ້ເຫັນຄວາມບາບພາຍໃນໃຈຂອງເຮົາ, ອົງພຣະຜູ້
ເປັນເຈົ້າຈະບໍ່ຊົງຟັງສຽງຂອງເຮົາ.
[19]ແຕ່ພຣະເຈົ້າໄດ້ຍິນສຽງຂ້ອຍແນ່ນອນ; ພຣະອົງໃສ່ໃຈຕໍ່ຄຳພາວັນນາອະທິຖານຂອງຂ້ອຍ.[20]ສັນຣະເສີນແດ່ພຣະເຈົ້າ, ຜູ້ບໍ່ຊົງຫັນຫນີໄປຈາກ
ຄຳພາວັນນາອະທິຖານຂອງຂ້ອຍ ຫລືຫັນຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງໄປຈາກຂ້ອຍ.


generated on Tue Jun 17 19:01:42 2025

67 [1]ສໍາລັບນັກດົນຕຣີ; ກ່ຽວກັບເຄື່ອງດົນຕຣີທັງຫລາຍ. ບົດເພງສັນຣະເສີນ. ຂໍພຣະເຈົ້າຊົງເມດຕາຕໍ່ພວກຂ້ານ້ອຍ, ແລະຊົງອວຍພອນ
ພວກຂ້ານ້ອຍ ແລະຊົງໃຫ້ພຣະພັກຂອງພຣະອົງທໍແສງມາເຫນືອພວກຂ້ານ້ອຍ ເສ ລາ [2]ເພື່ອທົ່ວທັງໂລກນີ້ຈະຮູ້ຈັກພຣະປະສົງ, ແລະ
ຄວາມພົ້ນຂອງພຣະອົງເປັນທີ່ຮູ້ຈັກໃນທ່າມກາງປະຊາຊົນທັງຫມົດ.

[3]ຂໍໃຫ້ຊົນຊາດທັງຫລາຍສັນຣະເສີນພຣະອົງ, ພຣະເຈົ້າ; ໃຫ້ຄົນທັງປວງສັນຣະເສີນພຣະອົງ. [4]ໂອ, ຂໍໃຫ້ຊົນຊາດທັງຫລາຍຍິນດີແລະຮ້ອງເພງ
ດ້ວຍຄວາມຊື່ນບານ, ເພາະພຣະອົງຈະຊົງພິພາກສາຊົນຊາດທັງຫລາຍດ້ວຍຄວາມຍຸຕິທັມແລະປົກຄອງເຫນືອຊົນຊາດທັງຫລາຍເທິງແຜ່ນດິນ
ໂລກ. ເສລາ
[5]ຂໍໃຫ້ຊົນຊາດທັງຫລາຍສັນຣະເສີນພຣະອົງ, ຂ້າແດ່ພຣະເຈົ້າ; ຂໍໃຫ້ຊົນຊາດທັງຫມົດສັນຣະເສີນພຣະອົງ. [6]ແຜ່ນດິນໂລກໄດ້ເກີດຜົນຂອງມັນ
ແລະພຣະເຈົ້າ, ຄືພຣະເຈົ້າຂອງເຮົາ, ໄດ້ຊົງອວຍພອນເຮົາ.
[7]ພຣະເຈົ້າໄດ້ຊົງອວຍພອນແກ່ພວກເຮົາ, ແລະທີ່ສຸດປາຍທັງຫມົດແຫ່ງແຜ່ນດິນໂລກຖວາຍພຣະກຽດຕິຍົດແດ່ພຣະອົງ.

 generated on Tue Jun 17 19:01:42 2025

68 [1]ຂໍພຣະເຈົ້າຊົງລຸກຂຶ້ນ ໃຫ້ບັນດາສັດຕຣູຂອງພຣະອົງກະຈາຍໄປ ໃຫ້ບັນດາຜູ້ທີ່ກຽດຊັງພຣະອົງຫນີໄປຕໍ່ຫນ້າພຣະອົງ[2]ຄວັນຖືກຂັບໄປ
ສັນໃດ ກໍຂໍຊົງໄລ່ພວກເຂົາໄປສັນນັ້ນ ຂີ້ເຜີ້ງເປື່ອຍຕໍ່ຫນ້າໄຟສັນໃດ ກໍຂໍໃຫ້ຄົນຊົ່ວພິນາດຕໍ່ຫນ້າພຣະເຈົ້າສັນນັ້ນ[3]ແຕ່ຂໍໃຫ້ຄົນຊອບທັມຍິນ
ດີ ໃຫ້ເຂົາຍິນດີ ສຸກໃຈ ຢູ່ຊ້ອງຫນ້າພຣະອົງ ຂໍໃຫ້ພວກເຂົາຊື່ນຊົມຍິນດີແລະມີຄວາມສຸກ.

[4]ຈົ່ງຮ້ອງເພງຖວາຍພຣະເຈົ້າ, ຈົ່ງຮ້ອງສັນຣະເສີນພຣະນາມຊື່ຂອງພຣະອົງ! ຈົ່ງສັນຣະເສີນພຣະອົງ ຜູ້ຊົງເຄື່ອນຜ່ານທີ່ຮ່ອມພູເຂົາຂອງແມ່ນ້ຳຈໍ
ແດນ! ພຣະຢາເວຄືພຣະນາມຊື່ຂອງພຣະອົງ! ຈົ່ງຊື່ນຊົມຍິນດີຢູ່ຊ້ອງຫນ້າ ພຣະອົງເຖີດ![5]ພໍ່ຂອງເດັກກຳພ້າ, ຜູ້ພິພາກສາຂອງບັນດາຍິງ
ຫມ້າຍ, ຄືພຣະເຈົ້າຜູ້ຢູ່ສະຖິດຢູ່ໃນສະຖານທີ່ສັກສິດ.[6]ພຣະເຈົ້າຊົງເອົາຄົນເປົ່າປ່ຽວໄປໄວ້ໃນຄອບຄົວທັງຫລາຍ; ພຣະອົງຊົງນຳບັນດາຊະເລີຍ
ອອກມາດ້ວຍການຮ້ອງເພງ; ແຕ່ພວກກະບົດອາສັຍໃນແຜ່ນດິນທີ່ເປົ່າປ່ຽວ.
[7]ຂ້າແດ່ພຣະເຈົ້າ, ເມື່ອພຣະອົງສະເດັດນຳຫນ້າປະຊາຊົນຂອງພຣະອົງອອກໄປ, ເມື່ອພຣະອົງຊົງນຳຂະບວນເດີນຜ່ານຖິ່ນແຫ້ງແລ້ງກັນດານ,
ເສລາ[8]ແຜ່ນດິນໂລກກໍໄດ້ຫວັ່ນໄຫວ; ທ້ອງຟ້າກໍໄດ້ເທຝົນລົງມາຕໍ່ຫນ້າພຣະເຈົ້າ, ຕໍ່ຫນ້າພຣະເຈົ້າເມື່ອພຣະອົງມາຍັງພູເຂົາຊີນາຍ, ຕໍ່ຫນ້າພ
ຣະເຈົ້າ, ຄືພຣະເຈົ້າຂອງອິສະຣາເອນ.
[9]ຂ້າແດ່, ພຣະເຈົ້າ, ພຣະອົງໄດ້ຊົງເທຝົນລົງມາຫລວງຫລາຍ, ພຣະອົງໄດ້ຊົງເສີມກຳລັງໃຫ້ແກ່ມໍຣະດົກຂອງພຣະອົງ ເມື່ອມັນເມື່ອຍລ້າ.[10]ປະ
ຊາຊົນຂອງພຣະອົງກໍໄດ້ອາສັຍຢູ່ໃນນັ້ນ; ຂ້າແດ່ພຣະເຈົ້າ, ພຣະອົງໄດ້ຊົງປຣະທານໃຫ້ແກ່ຄົນຍາກຈົນຈາກຄວາມດີຂອງພຣະອົງ.
[11]ອົງພຣະຜູ້ເປັນເຈົ້າ, ໄດ້ຊົງອອກຄຳສັ່ງບັນຊາ ແລະບັນດາຜູ້ປະກາດເລື່ອງນັ້ນກໍເປັນກອງທັບໃຫຍ່.[12-13]ບັນດາກະສັດແຫ່ງກອງທັບທັງຫລາຍກໍ
ຫນີໄປ, ພວກເຂົາຫນີ, ແລະພວກຜູ້ຍິງທີ່ກຳລັງລໍຖ້າທີ່ບ້ານກໍແບ່ງຂອງທີ່ຮິບມາໄດ້: ພວກນົກກາງແກກໍຫຸ້ມດ້ວຍເງິນພ້ອມກັບປີກຫຸ້ມດ້ວຍຄຳ.
ໃນຂະນະທີ່ບາງຄົນໃນພວກເຈົ້າໄດ້ຢູ່ທ່າມກາງຝູງແກະເປັນຫຍັງພວກເຈົ້າເຮັດເຊັ່ນນີ້?.
[14]ພຣະຜູ້ຊົງຣິດອຳນາດຊົງເຮັດໃຫ້ກະສັດທັງຫລາຍກະແຈກກະຈາຍໄປໃນທີ່ນັ້ນ ເປັນເຫມືອນເມື່ອຕອນທີ່ຫິມະໄດ້ຕົກເທິງພູເຂົາຊານໂມນ[15]ພູ
ເຂົາທີ່ແຂງແກ່ນຄືແດນພູເຂົາແຫ່ງບາຊານ ພູເຂາທີ່ສູງຄືແດນພູເຂົາແຫ່ງບາຊານ ແດນພູເຂົາສູງເອີຍ.[16]ເປັນຫຍັງເຈົ້າຫລຽວເບິ່ງທີ່ພູເຂົາຊຶ່ງພ
ຣະເຈົ້າຊົງປະສົງໃຫ້ເປັນສະຖານທີ່ພຣະອົງຈະຢູ່ດ້ວຍຄວາມອິດສາ? ພຣະຢາເວຈະຢູ່ໃນທີ່ນັ້ນເປັນນິດ.
[17]ບັນດາຣົຖຮົບຂອງພຣະເຈົ້າ, ນັບເປັນສອງຫມື່ນ ນັບເປັນຫລາຍພັນຫລາຍຫມື່ນ ອົງພຣະຜູ້ເປັນເຈົ້າຊົງຢູ່ທ່າມກາງພວກເຂົາໃນສະຖານ
ທີ່ບໍຣິສຸດດັ່ງເຊັ່ນທີ່ພູເຂົາຊີນາຍ.[18]ພຣະອົງໄດ້ຂຶ້ນສູ່ເບື້ອງສູງ ໄດ້ຊົງນຳຊະເລີຍໄປນຳ ແລະໄດ້ຊົງຮັບຂອງຂວັນຈາກເຫລົ່າມະນຸດແມ່ນກະທັ້ງ
ຈາກຜູ້ທີ່ຕໍ່ສູ້ພຣະເຈົ້າ ເພື່ອພຣະເຈົ້າພຣະຢາເວຈະຊົງຢູ່ທີ່ນັ້ນ.
[19]ຈົ່ງຍ້ອງຍໍສັນຣະເສີນແດ່ອົງພຣະຜູ້ເປັນເຈົ້າ, ຜູ້ຊົງແບກພາຣະຫນັກຂອງພວກເຮົາຢູ່ທຸກມື້ທຸກຄືນ, ພຣະເຈ້າ, ຜູ້ຊົງເປັນຄວາມພົ້ນຂອງເຮົາ.
ເສລາ[20]ພຣະເຈົ້າຂອງເຮົາຊົງເປັນພຣະເຈົ້າ; ຜູ້ຊົງຊ່ວຍໃຫ້ລອດພົ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າ ຊົງເປັນຜູ້ທີ່ສາມາດຊ່ວຍກູ້ໃຫ້ພົ້ນຈາກ
ຄວາມຕາຍ.[21]ແຕ່ພຣະເຈົ້າຈະຊົງທຸບຫົວຂອງບັນດາສັດຕຣູຂອງພຣະອົງໃຫ້ແຕກ, ຄືທຸກກະໂຫລກຂອງຜູ້ທີ່ດຳເນີນໃນທາງທີ່ຂັດແຍ່ງກັບພຣະ
ອົງ.
[22]ອົງພຣະຜູ້ເປັນເຈົ້າໄດ້ກ່າວວ່າ, "ເຮົາຈະນຳພວກສັດຕຣູຂອງເຮົາກັບມາຈາກບາຊານ; ເຮົາຈະນຳພວກເຂົາກັບມາຈາກທີ່ເລິກຂອງທະເລ[23]ເພື່ອ
ເຈົ້າຈະໄດ້ຢຽບຢ່ຳບັນດາສັດຕູຂອງເຈົ້າ, ເອົາຕີນຂອງເຈົ້າຈຸ່ມລົງໃນເລືອດແລະເພື່ອລີ້ນຂອງຫມາທັງຫລາຍຂອງເຈົ້າຈະໄດ້ສ່ວນແບ່ງຂອງພວກ
ມັນຈາກພວກສັດຕຣູຂອງເຈົ້າ."
[24]ພວກເຂົາໄດ້ເຫັນຂະບວນແຫ່ຂອງພຣະອົງ, ພຣະເຈົ້າ, ຂະບວນແຫ່ຂອງພຣະເຈົ້າ, ຂອງຂ້ານ້ອຍທັງຫລາຍຜູ້ເປັນພຣະມະຫາກະສັດ, ຂອງ
ຂ້ານ້ອຍເຂົ້າໃນສະຖານທີ່ສັກສິດ[25]ພວກນັກຮ້ອງໄດ້ນຳຫນ້າ, ພວກນັກດົນຕຣີດ້ານຫລັງແລະທາງກາງມີຍິງສາວທີ່ຍັງບໍ່ແຕ່ງງານຫລິ້ນຕີກອງ.
[26]ຈົ່ງສັນຣະເສີນພຣະຢາເວເຖີດ; ຈົ່ງຖວາຍສັນຣະເສີນແດ່ພຣະເຈ້າໃນທີ່ຊຸມນຸມໃຫຍ່, ທ່ານທັງຫລາຍຜູ້ເປັນເຊື້ອສາຍແທ້ຈິງຂອງອິສະຣາເອນ
ເອີຍ.[27]ມີເບັນຢາມິນເຜົ່າເລັກນ້ອຍທີ່ສຸດນຳຫນ້າ, ດັ່ງນັ້ນຜູ້ນຳຂອງຢູດາແລະພວກຝູງຊົນ, ແລ້ວບັນດາພວກຜູ້ນຳເຊບູໂລນແລະພວກຜູ້ນຳຂອງ
ເນັບທາລີ.
[28]ອິສະຣາເອນ, ພຣະເຈົ້າ, ຂອງເຈົ້າໄດ້ຊົງບັນຊາກຳລັງຂອງເຈົ້າ ຂ້າແດ່ພຣະເຈົ້າ, ຂໍຊົງສຳແດງຣິທານຸພາບຂອງພຣະອົງໃຫ້ແກ່ຂ້ານ້ອຍທັງ
ຫລາຍດັ່ງທີ່ພຣະອົງເຄີຍສຳແດງມາແລ້ວໃນອາດີດ.[29]ຂໍຊົງສຳແດງຣິທານຸພາບຂອງພຣະອົງໃຫ້ແກ່ຂ້ານ້ອຍທັງຫລາຍຈາກພຣະວິຫານຂອງພ
ຣະອົງທີ່ເຢຣູຊາເລັມ, ທີ່ຊຶ່ງບັນດາພະຣາຊານຳຂອງຂວັນມາຖວາຍພຣະອົງ.
[30]ຂໍຊົງເປັ່ງສຽງນາບຂູ່ໃນການສູ້ຮົບໃສ່ພວກສັດຮ້າຍປ່າເຖື່ອນໃນປ່າ ໃສ່ຊົນຊາດທັງຫລາຍ, ຕໍ່ຝູງງົວແລະຝູງລູກງົວ, ຂໍຊົງເຮັດໃຫ້ພວກເຂົາອັບ
ອາຍແລະຊົງເຮັດໃຫ້ພວກເຂົານຳຂອງບັນນາການມາຖວາຍແດ່ພຣະອົງ; ຂໍຊົງເຮັດໃຫ້ຊົນຊາດທັງຫລາຍທີ່ຮັກໃນການກໍສົງຄາມກະແຈກກະ
ຈາຍໄປ.[31]ພວກເຈົ້ານາຍຈະອອກມາຈາກເອຢິບ; ພວກຄົນເອທິໂອເປຍຈະຮີບຍົກມືຂອງພວກເຂົາອອກຕໍ່ພຣະເຈົ້າ.
[32]ຈົ່ງຮ້ອງເພງແດ່ພຣະເຈົ້າ, ບັນດາຣາຊອານາຈັກແຫ່ງແຜ່ນດິນໂລກເອີຍ; ເສລາ ຈົ່ງຮ້ອງສັນຣະເສີນແດ່ພຣະຢາເວເຖີດ.[33]ຕໍ່ພຣະອົງຜູ້ຊົງຂັບ
ເຄື່ອນໄປເທິງຟ້າສະຫວັນແຫ່ງບັນດາຟ້າສະຫວັນ, ຊຶ່ງມີມາຕັ້ງແຕ່ໂບຮານ; ເບິ່ງເຖີດ, ພຣະອົງຊົງເປັ່ງສຽງຂອງພຣະອົງຂຶ້ນດ້ວຍຣິທານຸພາບ.
[34]ຈົ່ງປະກາດເຖິງຣິດທານຸພາບແດ່ພຣະເຈົ້າ; ພຣະສະຫງ່າຣາສີຂອງ ພຣະອົງຢູ່ເຫນືອອິສະຣາເອນ, ແລະຣິດອຳນາດຍິ່ງໃຫຍ່ຂອງພຣະອົງຢູ່
ໃນບັນດາທ້ອງຟ້າ.[35]ຂ້າແດ່ພຣະເຈົ້າ, ພຣະອົງຊົງເປັນທີ່ຫນ້າຢຳເກງໃນສະຖານທີ່ບໍຣິສຸດຂອງພຣະອົງ; ພຣະເຈົ້າຂອງອິສະຣາເອນ-ພຣະອົງຊົງ
ປຣະທານກຳລັງແລະອຳນາດແກ່ປະຊາກອນຂອງພຣະອົງ. ສັນຣະເສີນແດ່ພຣະເຈົ້າ.

69 ສຳລັບຄະນະນັກດົນຕຣີ; ສົ່ງເຖິງ ໂຊຊານິມ. ບົດເພງສັນຣະເສີນຂອງດາວິດ. 1 ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດ, ຂ້າແດ່ພຣະເຈົ້າ; ເພາະນ້ຳ
ເຮັດໃຫ້ຊີວິດຂ້ານ້ອຍຕົກຢູ່ໃນອັນຕະຣາຍ. 2 ຂ້ານ້ອຍຈົມຢູ່ໃນຂີ້ຕົມ, ທີ່ຊຶ່ງບໍ່ມີທີ່ຢືນ, ຂ້ານ້ອຍໄດ້ມາຍັງທີ່ນ້ຳເລິກ; ທີ່ຊຶ່ງນ້ຳໄຫລຖ້ວມຂ້າ
ນ້ອຍ.

3 ຂ້ານ້ອຍອິດອອ່ນກັບການຮ້ອງໃຫ້ຂອງຂ້ານ້ອຍ; ລຳຄໍຂອງຂ້ານ້ອຍແຫ້ງ ຕາຂອງນ້ອຍກໍອ່ອນແຮງໃນຂະນະທີ່ຂ້ານ້ອຍລໍຄອຍພຣະເຈົ້າຂອງຂ້າ
ນ້ອຍ. 4 ບັນດາຄົນທີ່ກຽດຊັງຂ້ານ້ອຍຢ່າງບໍ່ມີເຫດຜົນມີຫລາຍຍິ່ງກວ່າເສັ້ນຜົມເທິງຫົວຂອງຂ້ານ້ອຍ; ບັນດາຄົນທີ່ຕັດຂ້ານ້ອຍຖິ້ມ, ຄົນທີ່ເປັນສັດ
ຕຣູຂອງຂ້ານ້ອຍດ້ວຍເຫດຜົນທີ່ບໍ່ຖືກຕ້ອງກໍມີກຳລັງຫລາຍ; ຂ້ານ້ອຍຕ້ອງສົ່ງຄືນສິ່ງທີ່ຂ້ານ້ອຍບໍ່ໄດ້ລັກໄປ.
5 ຂ້າແດ່ພຣະເຈົ້າ, ພຣະອົງຊົງຮູ້ເຖິງຄວາມໂງ່ຈ້າຂອງຂ້ານ້ອຍແລະຄວາມຜິດບາບທັງຫລາຍຂອງຂ້ານ້ອຍ, ເຊື່ອງໄວ້ຈາກພຣະອົງບໍ່ໄດ້ ຂ້າແດ່ພ
ຣະຢາເວ, ອົງພຣະຜູ້ເປັນເຈົ້າຈອມໂຍທາ. 6 ຂໍຢ່າຊົງໃຫ້ບັນດາຜູ້ລໍຄອຍພຣະອົງຕ້ອງອັບອາຍເພາະຂ້ານ້ອຍເລີຍ, ຂໍຢ່າຊົງໃຫ້ຜູ້ທີ່ສະແຫວງຫາພ
ຣະອົງໄດ້ຮັບຄວາມອັບອາຍເພາະຂ້ານ້ອຍເລີຍ, ຂ້າແດ່ພຣະເຈົ້າຂອງອິສະຣາເອນ.
7 ເພາະເຫັນແກ່ພຣະອົງ ຂ້ານ້ອຍຈຶ່ງໄດ້ຮັບການຫມິ່ນປະຫມາດ; ຄວາມຂາຍຫນ້າໄດ້ຄຸມຫນ້າຂ້ານ້ອຍໄວ້. 8 ຂ້ານ້ອຍກາຍເປັນຄົນແປກຫນ້າສຳ
ຫລັບເຫລົ່າພີ່ນ້ອງຂອງຂ້ານ້ອຍ, ແລະເປັນຄົນຕ່າງດ້າວສຳຫລັບລູກທັງຫລາຍແຫ່ງແມ່ຂອງຂ້ານ້ອຍ. 9 ຄວາມຮ້ອນໃຈໃນເລື່ອງພຣະວິຫານຂອງ
ພຣະອົງໄດ້ເຜົາຜານຂ້ານ້ອຍ, ແລະຄຳຫມິ່ນປະຫມາດຂອງຜູ້ທີ່ເຍາະເຍີ້ຍພຣະອົງຕົກເທິງຂ້ານ້ອຍ.
10 ເມື່ອຂ້ານ້ອຍອົດອາຫານແລະຖ່ອມຕົວລົງ, ພວກເຂົາໄດ້ດູຖູກຂ້ານ້ອຍ. 11 ເມື່ອຂ້ານ້ອຍໃຊ້ຜ້າກະສອບມາເປັນເຄື່ອງນຸ່ງຫົ່ມຂອງຂ້ານ້ອຍ ຂ້າ
ນ້ອຍກັບກາຍເປັນຂີ້ປາກຂອງພວກເຂົາ. 12 ບັນດາຄົນທີ່ນັ່ງທີ່ປະຕູເມືອງກໍເວົ້າເລື່ອງຂ້ານ້ອຍ ຂ້ານ້ອຍເປັນເພງຂອງຄົນຂີ້ເມົາ.
13 ຂ້າແດ່ພຣະຢາເວ, ຂ້ານ້ອຍຈະພາວັນນາອະທິຖານຕໍ່ພຣະອົງໃນຍາມທີ່ພຣະອົງຈະຊົງຍອມຮັບ; ຂໍຊົງຕອບຂ້ານ້ອຍດ້ວຍຄວາມສັດຈິງແຫ່ງ
ຄວາມພົ້ນຂອງພຣະອົງ. 14 ຂໍຊົງດຶງຂ້ານ້ອຍຂຶ້ນຈາກຂີ້ຕົມ, ແລະຢ່າຊົງປ່ອຍໃຫ້ຂ້ານ້ອຍຈົມເລີຍ; ຂໍຊົງນຳຂ້ານ້ອຍໃຫ້ພົ້ນຈາກບັນດາຄົນທີ່ກຽດ
ຊັງຂ້ານ້ອຍ ແລະຊົງຊ່ວຍເຫລືອໃຫ້ພົ້ນຈາກນ້ຳເລິກ. 15 ຂໍຢ່າຊົງໃຫ້ນ້ຳຖ້ວມຂ້ານ້ອຍ ແລະຢ່າຊົງໃຫ້ທີ່ເລິກກືນຂ້ານ້ອຍເສຍ. ຂໍຢ່າຊົງໃຫ້ຂຸມ
ເລິກນັ້ນປິດປາກຂອງມັນງັບຂ້ານ້ອຍໄວ້.
16 ຂ້າແດ່, ພຣະຢາເວ, ຂໍຊົງຕອບຂ້ານ້ອຍ ເພາະຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງນັ້ນປະເສີດ, ເພາະຄວາມເມດຕາຂອງພຣະອົງສຳ
ລັບຂ້ານ້ອຍນັ້ນມີຫລວງຫລາຍ, ຂໍຊົງມາຫາຂ້ານ້ອຍດ້ວຍເຖີດ. 17 ຂໍຢ່າຊົງເຊື່ອງຫນ້າຂອງພຣະອົງ, ຈາກຜູ້ຮັບໃຊ້ຂອງພຣະອົງເລີຍ; ເພາະຂ້າ
ນ້ອຍຢູ່ໃນຄວາມທຸກໃຈ ຂໍຊົງຮີບຕອບຂ້ານ້ອຍເຖີດ.
18 ຂໍຊົງໂຜດມາຫາຂ້ານ້ອຍແລະຊົງໄຖ່ຂ້ານ້ອຍ. ເພາະພວກສັດຕຣູຂອງຂ້ານອ້ຍຕັ້ງຄ່າຫົວຂ້ານ້ອຍໄວ້. 19 ພຣະອົງຊົງຮູ້ເຖິງການຖືກເຍາະເຍີ້ຍ
ຂອງຂ້ານ້ອຍ, ທັງຄວາມອັບອາຍ, ແລະເສຍກຽຕຂອງຂ້ານ້ອຍ, ພວກສັດຕຣູຂອງຂ້ານ້ອຍທັງຫມົດຕ່າງຢູ່ຊ້ອງຫນ້າຂອງພຣະອົງ.
20 ຄຳຫມິ່ນປະຫມາດ ເຮັດໃຫ້ຈິດໃຈຂ້ານ້ອຍເມື່ອຍອິດອ່ອນຫລາຍ; ຂ້ານ້ອຍເຕັມໄປດ້ວຍຄວາມຫນັກໃຈ; ຂ້ານ້ອຍໄດ້ແນມຫາບາງຄົນທີ່ຈະ
ມາອີຕົນ, ແຕ່ກໍບໍ່ມີເລີຍ ຂ້ານ້ອຍໄດ້ແນມຫາຄົນປອບໃຈ; ແຕ່ຂ້ານ້ອຍບໍ່ພົບໃຜເລີຍ. 21 ຂ້ານ້ອຍຫິວເຂົ້າພວກເຂົາເອົາຢາພິດໃຫ້ເປັນອາຫານ;
ເມື່ອຂ້ານ້ອຍຫິວນ້ຳພວກເຂົາໃຫ້ນ້ຳສົ້ມແກ່ຂ້ານ້ອຍດື່ມ.
22 ຂໍຊົງໃຫ້ໂຕະອາຫານທີ່ຕັ້ງຢູ່ຕໍ່ຫນ້າພວກເຂົາກາຍເປັນກັບດັກ; ເມື່ອພວກເຂົາຄິດວ່າພວກເຂົາປອດພັຍແລ້ວ, ຂໍໃຫ້ມັນກາຍເປັນບ້ວງແຮ້ວ. 23 ຂໍ
ຊົງໃຫ້ດວງຕາຂອງພວກເຂົາມືດໄປເພື່ອພວກເຂົາບໍ່ສາມາດເບິ່ງເຫັນໄດ້; ແລະຊົງເຮັດໃຫ້ບັ້ນແອວຂອງພວກເຂົາສັ່ນສະເທືອນສະເຫມີ.
24 ຂໍຊົງເທຄວາມໂກດຮ້າຍຂອງພຣະອົງລົງເທິງພວກເຂົາ, ແລະໃຫ້ຄວາມໂກດແຄ້ນອັນຮ້ອນຍິ່ງຂອງພຣະອົງຕາມທັນພວກເຂົາ. 25 ຂໍໃຫ້ສະຖານທີ່
ຂອງພວກເຂົາບໍ່ມີຫຍັງ; ຢ່າໃຫ້ມີຜູ້ໃດອາສັຍຢູ່ໃນເຕັນທັງຫລາຍຂອງພວກເຂົາເລີຍ.
26 ເພາະພວກເຂົາໄດ້ຂົ່ມເຫັງຜູ້ທີ່ພຣະອົງຊົງຂ້ຽນຕີ. ພວກເຂົາເລົ່າຊ້ຳເຖິງຄວາມເຈັບປວດຂອງຜູ້ທີ່ພຣະອົງຊົງໃຫ້ບາດເຈັບແລ້ວ. 27 ຂໍຊົງກ່າວໂທດ
ພວກເຂົາດ້ວຍເລື່ອງການເຮັດຜິດບາບຊ້ຳແລ້ວຊ້ຳອີກ; ຢ່າປ່ອຍໃຫ້ພວກເຂົາເຂົ້າມາໃນຊັຍຊະນະແຫ່ງຄວາມຊອບທັມຂອງພຣະອົງ.
28 ຂໍໃຫ້ພວກເຂົາຖືກລົບອອກຈາກຫນັງສືແຫ່ງຊີວິດ ແລະຢ່າໃຫ້ຖືກບັນທຶກລົງໄປໄວ້ໃນຫມູ່ຄົນຊອບທັມ. 29 ແຕ່ຂ້ານ້ອຍທຸກຍາກແລະໂສກເສົ້າ;
ຂ້າແດ່, ພຣະເຈົ້າ, ຂໍຄວາມພົ້ນຂອງພຣະອົງວາງຂ້ານ້ອຍໄວ້ເທິງທີ່ສູງ.
30 ຂ້ານ້ອຍສັນຣະເສີນພຣະນາມຊື່ຂອງພຣະເຈົ້າດ້ວຍບົດເພງ ແລະຈະຍົກຍ້ອງພຣະອົງດ້ວຍການຂອບພຣະຄຸນ. 31 ການນີ້ຈະເຮັດໃຫ້ພຣະຢາເວ
ພໍໃຈຫລາຍກວ່າ ການຖວາຍບູຊາງົວໂຕຜູ້ຫລືງົວຫນຸ່ມນັ້ນ.
32 ບັນດາຜູ້ຖ່ອມຕົວໄດ້ເຫັນການນັ້ນແລະຍິນດີ, ທ່ານຜູ້ສະແຫວງຫາພຣະເຈົ້າ, ຂໍໃຫ້ໄດ້ຮັບຄຳເລົ້າໂລມໃຈຂອງທ່ານ. 33 ເພາະພຣະຢາເວ ຊົງຟັງ
ຜູ້ຂັດສົນອະທິຖານຫາແລະບໍ່ຊົງດູຫມິ່ນບັນດາຄົນທີ່ຖືກຈອງຈຳໄວ້ຂອງພຣະອົງ.
34 ຂໍຟ້າສະຫວັນແລະແຜ່ນດິນໂລກສັນຣະເສີນພຣະອົງ, ທັງທະເລແລະທຸກສິ່ງທີ່ເຄື່ອນໄຫວຢູ່ໃນນັ້ນ. 35 ເພາະພຣະເຈົ້າ ຈະຊົງຊ່ວຍຊີໂອນໃຫ້ພົ້ນ
ແລະຈະຊົງສ້າງເມືອງທັງຫລາຍຂອງຢູດາຂຶ້ນ; ປະຊາຊົນຈະອາສັຍຢູ່ທີ່ນັ້ນແລະໄດ້ໄວ້ເປັນກຳມະສິດ. 36 ເຊື້ອສາຍຜູ້ຮັບໃຊ້ຂອງພຣະອົງຈະໄດ້
ເປັນມໍຣະດົກ; ແລະບັນດາຜູ້ທີ່ຮັກພຣະນາມຊື່ຂອງພຣະອົງຈະຢູ່ທີ່ນັ້ນ.


generated on Tue Jun 17 19:01:42 2025

70 ສຳລັບຄະນະນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ; ນຳມາເຊີ່ງຄວາມຊົງຈຳ.[1]ຂ້າແດ່ພຣະເຈົ້າ, ພຣະຢາເວ, ຂໍຊົງຊ່ວຍຂ້ານ້ອຍໃຫ້
ພົ້ນ ຂໍຊົງໂຜດສະເດັດມາແລະຊ່ວຍຂ້ານ້ອຍດ້ວຍເຖີດ.[2]ຂໍໃຫ້ບັນດາຜູ້ທີ່ພະຍາຍາມເອົາຊີວິດຂອງຂ້ານ້ອຍໄດ້ອັບອາຍແລະຂາຍຫນ້າ; ຂໍ
ໃຫ້ພວກເຂົາຫັນກັບໄປແລະໄດ້ຮັບຄວາມສັບສົນວຸ້ນວາຍ, ຄືບັນດາຜູ້ທີ່ພໍໃຈໃນຄວາມເຈັບປວດຂອງຂ້ານ້ອຍ.[3]ຂໍໃຫ້ພວກເຂົາໄດ້ຫັນກັບໄປ
ເພາະຄວາມຂາຍຫນ້າຂອງພວກເຂົາ, ຄືບັນດາຜູ້ທີ່ເວົ້າວ່າ, "ຫັ້ນເດ, ຫັ້ນເດ"

[4]ໃຫ້ບັນດາຜູ້ທີ່ສະແຫວງຫາພຣະອົງທັງຫມົດຍິນດີໃນພຣະອົງ; ຂໍໃຫ້ບັນດາຜູ້ທີ່ຮັກຄວາມພົ້ນຂອງພຣະອົງກ່າວຢູ່ສະເຫມີວ່າ, "ຂໍໃຫ້ພຣະ
ເຈົ້າໄດ້ຮັບການສັນຣະເສີນ."[5]ແຕ່ຂ້ານ້ອຍຍາກຈົນແລະຂັດສົນ, ຂ້າແດ່ພຣະເຈົ້າ, ຂໍຊົງຮີບມາຫາຂ້ານ້ອຍ ພຣະອົງຊົງເປັນຄວາມຊ່ວຍເຫລືອ
ຂອງຂ້ານ້ອຍແລະພຣະອົງຊົງຊ່ວຍກູ້ຂ້ານ້ອຍ; ຂ້າແດ່ພຣະຢາເວ, ຂໍຊົງຢ່າຊັກຊ້າ.

 generated on Tue Jun 17 19:01:42 2025

71 [1]ຂ້າແດ່, ພຣະຢາເວ, ຂ້ານ້ອຍລີ້ພັຍໃນພຣະອົງ; ຂໍຢ່າໃຫ້ຂ້ານ້ອຍໄດ້ຮັບຄວາມອັບອາຍເລີຍ.[2]ຂໍຊົງກອບກູ້ເອົາຂ້ານ້ອຍແລະຊົງໃຫ້ຂ້າ
ນ້ອຍປອດພັຍໃນຄວາມຊອບທັມຂອງພຣະອົງ; ຂໍຊົງງ່ຽງຫູຂອງພຣະອົງ ຟັງຂ້ານ້ອຍແລະຊົງຊ່ວຍຂ້ານ້ອຍໃຫ້ພົ້ນ.[3]ຂໍຊົງເປັນບ່ອນລີ້ພັຍ
ຂອງຂ້ານ້ອຍທີ່ຂ້ານ້ອຍຈະເຂົ້າໄປຮົບໄດ້ສະເຫມີ; ພຣະອົງໄດ້ຊົງບັນຊາໃຫ້ຊ່ວຍຂ້ານ້ອຍໃຫ້ພົ້ນ, ເພາະພຣະອົງຊົງເປັນທີ່ເພິ່ງແລະປ້ອມ
ປ້ອງກັນຂອງຂ້ານ້ອຍ.

[4]ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ, ຂໍຊົງຊ່ວຍກູ້ຂ້ານ້ອຍ, ໃຫ້ພົ້ນຈາກມືຂອງຄົນຊົ່ວ ພົ້ນຈາກມືຂອງຄົນຊົ່ວຊາມແລະຄົນໂຫດຮ້າຍ.[5]ຂ້າແດ່
ອົງພຣະຜູ້ເປັນເຈົ້າ, ພຣະຢາເວ. ເພາະພຣະອົງຊົງເປັນຄວາມຫວັງຂອງຂ້ານ້ອຍ ຂ້ານ້ອຍໄດ້ວາງໃຈໃນພຣະອົງ, ຕັ້ງແຕ່ຂ້ານ້ອຍເປັນເດັກມາ.
[6]ຂ້ານ້ອຍໄດ້ຮັບການຊ່ວຍຊູຕັ້ງແຕ່ຢູ່ໃນທ້ອງ; ພຣະອົງຊົງເປັນຜູ້ນຳຂ້ານ້ອຍ; ອອກມາຈາກທ້ອງແມ່ຂອງຂ້ານ້ອຍ ຄຳສັນຣະເສີນຂອງຂ້ານ້ອຍ
ຈະກ່າວເຖິງພຣະອົງຢູ່ສະເຫມີ.[7]ຂ້ານ້ອຍເປັນຕົວຢ່າງແກ່ຜູ້ຄົນຫລວງຫລາຍ; ພຣະອົງຊົງເປັນທີ່ລີ້ພັຍແຂງແກ່ນຂອງຂ້ານ້ອຍ.
[8]ປາກຂອງຂ້ານ້ອຍ ເຕັມໄປດ້ວຍຄຳສັນຣະເສີນພຣະອົງ, ແລະດ້ວຍການຖວາຍພຣະກຽຕພຣະອົງຕະຫລອດວັນຍັງຄ່ຳ.[9]ຂໍຢ່າຊົງຖິ້ມຂ້ານ້ອຍ
ໄປໃນໄວເຖົ້າຂອງຂ້ານ້ອຍ; ຂໍຢ່າຊົງຖິ້ມຂ້ານ້ອຍເມື່ອກຳລັງຂອງຂ້ານ້ອຍຫມົດລົງ.
[10]ເພາະພວກສັດຕຣູຂອງຂ້ານ້ອຍກຳລັງເວົ້າເຖິງຂ້ານ້ອຍ; ບັນດາຄົນທີ່ເຝົ້າເອົາຊີວິດຂອງຂ້ານ້ອຍກໍສຸມຫົວກັນວາງແຜນ.[11]ພວກເຂົາກ່າວວ່າ,
"ພຣະເຈົ້າຊົງຖິ້ມເຂົາແລ້ວ; ຈົ່ງໄລ່ຕາມແລະຈັບເຂົາໄວ້, ເພາະບໍ່ມີໃຜຊ່ວຍເຂົາໃຫ້ພົ້ນໄດ້."
[12]ຂ້າແດ່ພຣະເຈົ້າ, ຢ່າຊົງຢູ່ໄກຈາກຂ້ານ້ອຍເລີຍ; ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ ຂໍຊົງຮີບມາຊ່ວຍຂ້ານ້ອຍເຖີດ.[13]ຂໍໃຫ້ພວກເຂົາໄດ້ຮັບຄວາມ
ອັບອາຍແລະຖືກທຳລາຍ; ຄືບັນດາຜູ້ທີ່ເປັນສັດຕຣູຕໍ່ຊີວິດຂອງຂ້ານ້ອຍ ຂໍໃຫ້ພວກເຂົາຖືກໂຈມຕີໄປດ້ວຍການພ່າຍແພ້ແລະຄວາມອັບອາຍ, ຄື
ບັນດາຜູ້ທີ່ຫາທາງທຳຮ້າຍຂ້ານ້ອຍ.
[14]ແຕ່ຂ້ານ້ອຍຈະຫວັງໃຈໃນພຣະອົງຢູ່ສະເຫມີ ແລະຈະສັນຣະເສີນພຣະອົງຫລາຍຍິ່ງຂຶ້ນ.[15]ປາກຂອງຂ້ານ້ອຍຈະເລົ່າເຖິງຄວາມຊອບທັມ ແລະ
ຄວາມພົ້ນຂອງພຣະອົງ,ຕະຫລອດວັນຍັງຄ່ຳ ແມ່ນວ່າຂ້ານ້ອຍບໍ່ສາມາດເຂົ້າໃຈໄດ້ກໍຕາມ[16]ຂ້ານ້ອຍຈະມາດ້ວຍເລື່ອງກະທຳອັນຊົງຣິທານຸພາບ
ຂອງພຣະຢາເວພຣະຜູ້ເປັນເຈົ້າ; ຂ້ານ້ອຍຈະເອີຍເຖິງຄວາມຊອບທັມຂອງພຣະອົງ ຂອງພຣະອົງແຕ່ຜູ້ດຽວ.
[17]ຂ້າແດ່ພຣະເຈົ້າ, ພຣະອົງໄດ້ຊົງສອນຂ້ານ້ອຍຕັ້ງແຕ່ຍັງນ້ອຍ, ແມ່ນວ່າບັດນີ້ຂ້ານ້ອຍກປະກາດເຖິງບັນດາການກະທຳອັນມະຫັດສະຈັນຂອງພ
ຣະອົງ.[18]ແມ່ນຍາມຂ້ານ້ອຍເຖົ້າແລະມີຜົມງອກກໍຕາມ, ຂ້າແດ່ພຣະເຈົ້າ, ຂໍຢ່າຊົງລືມຂ້ານ້ອຍ, ເມື່ອຂ້ານ້ອຍໄດ້ປະກາດເຖິງຣິທານຸພາບຂອງພ
ຣະອົງ,ໃຫ້ແກ່ຊົ່ວອາຍຸຖັດໄປ ແລະປະກາດຣິທານຸພາບຂອງພຣະອົງແກ່ທຸກຄົນທີ່ຈະເກີດມານັ້ນ.
[19]ຂ້າແດ່ພຣະເຈົ້າ, ຄວາມຊອບທຳຂອງພຣະອົງກໍສູງສຸດເຊັ່ນກັນພຣະອົງ, ຜູ້ໄດ້ຊົງກະທຳສິ່ງຍິ່ງໃຫຍ່, ຂ້າແດ່ພຣະເຈົ້າ, ຜູ້ໃດຈະຄືດັ່ງພຣະອົງ?
[20]ພຣະອົງຜູ້ໄດ້ຊົງສຳແດງຄວາມທຸກຍາກລຳບາກ ແກ່ຂ້ານ້ອຍທັງຫລາຍ ຈະຊົງຮື້ຟື້ນຊີວິດຂອງຂ້ານ້ອຍທັງຫລາຍແລະຈະຊົງນຳຂ້ານ້ອຍທັງ
ຫລາຍຈາກຂຶ້ນມາຈາກທີ່ເລິກຂອງແຜ່ນດິນໂລກອີກຄັ້ງ.
[21]ພຣະອົງໄດ້ຊົງເຮັດໃຫ້ຂ້ານ້ອຍມີກຽຕຫລາຍກວ່າທີ່ຂ້ານ້ອຍມີ; ແລະທັງຈະປອບໂຍນຂ້ານ້ອຍ.[22]ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ ຂ້ານ້ອຍຈະ
ຂອບພຣະຄຸນພຣະອົງດ້ວຍພິນໃຫຍ່, ເນື່ອງດ້ວຍຄວາມສັດຈິງຂອງພຣະອົງ, ຂ້າແດ່ອົງບໍຣິສຸດ; ແຫ່ງອິສະຣາເອນ ຂ້ານ້ອຍຈະຮ້ອງສັນຣະເສີນ
ດ້ວຍພິນແດ່ພຣະອົງ.
[23]ຮີມສົບປາກຂອງຂ້ານ້ອຍຈະໂຫ່ຮ້ອງດ້ວຍຄວາມຍິນດີເມື່ອຂ້ານ້ອຍ ຮ້ອງສັນຣະເສີນແດ່ພຣະອົງ-ແມ່ນກະທັ້ງຈິດໃຈຂອງຂ້ານ້ອຍຊຶ່ງພຣະອົງ,
ໄດ້ຊົງໄຖ່ໄວ້ກໍເຊັ່ນກັນ.[24]ລີ້ນຂອງຂ້ານ້ອຍຈະກ່າວເຖິງຄວາມຊອບທັມຂອງພຣະອົງ,ຕະຫລອດວັນຍັງຄ່ຳ; ເພາະພວກເຂົາຖືກເຮັດໃຫ້ອັບອາຍ
ແລະສັບສົນ, ຄືບັນດາຜູ້ທີ່ຫາທາງທຳຮ້າຍຂ້ານ້ອຍ.

 generated on Tue Jun 17 19:01:42 2025

72 1ຂ້າແດ່ພຣະເຈົ້າ, ຂໍຊົງປຣະທານການພິພາກສາອັນຊອບທັມຂອງພຣະອົງ ແກ່ພະຣາຊາ ແລະຄວາມຊອບທັມຂອງພຣະອົງ ແກ່ລູກຂອງພ
ະຣາຊາ 2ຂໍໃຫ້ທ່ານພິພາກສາປະຊາກອນຂອງພຣະອົງ ດ້ວຍຄວາມຊອບທັມແລະພິພາກສາຄົນຍາກຈົນຂອງພຣະອົງ ດ້ວຍຄວາມຍຸຕິ
ທັມ 3ໃຫ້ບັນດາພູເຂົາສ້າງສັນຕິສຸກເພື່ອປະຊາຊົນຂໍໃຫ້ເນີນເຂົາທັງຫລາຍສ້າງຄວາມຊອບທັມ.

4ຂໍທ່ານສູ້ຄະດີເພື່ອຄົນຍາກຈົນໃນຫມູ່ປະຊາຊົນ; ຂໍທ່ານຊ່ວຍລູກຫລານຂອງຄົນຂັດສົນ ແລະທຸບຜູ້ກົດຂີ່ໃຫ້ແຕກເປັນຕ່ອນໆ. 5ຂໍໃຫ້ພວກເຂົາ
ຖວາຍກຽຕພຣະອົງຈົນກວ່າທີ່ດວງອາທິດດໍາຣົງຢູ່, ແລະຈົນກວ່າທີ່ດວງຈັນດໍາຣົງຢູ່ຕະຫລອດທຸກເຊື້ອຊາດ.
6ຂໍໃຫ້ທ່ານລົງມາດັ່ງຝົນທີ່ຕົກເທິງທົ່ງນາຊຶ່ງຕັດແລ້ວ, ດັ່ງເມັດຝົນທີ່ເທິງແຜ່ນດິນໂລກ. 7ຂໍໃຫ້ຄວາມຊອບທັມຈະເຣີນງອກງາມໃນສມັຍຂອງທ່ານ,
ແລະຂໍໃຫ້ມີຄວາມສົມບູນພູນສຸກຈົນກວ່າບໍ່ມີດວງຈັນອີກຕໍ່ໄປ.
8ຂໍໃຫ້ທ່ານຄອບຄອງຈາກທະເລເຖິງທະເລ, ແລະຈາກແມ່ນ້ຳນັ້ນຈົນເຖິງທີ່ສຸດປາຍແຜ່ນດິນໂລກ. 9ຂໍໃຫ້ບັນດາຜູ້ທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານກົ້ມ
ກາບລົງຕໍ່ຫນ້າທ່ານ; ຂໍໃຫ້ບັນດາສັດຕຣູຂອງທ່ານກົ້ມກາບເຖິງພື້ນດິນເຊັ່ນກັນ. 10ຂໍໃຫ້ບັນດາກະສັດແຫ່ງເມືອງທາຊິດ ແລະເກາະທັງຫລາຍ
ຖວາຍເຄື່ອງບັນນາການ; ຂໍໃຫ້ບັນດາກະສັດແຫ່ງ ເຊບາແລະ ເສບາ ຖວາຍຂອງຂວັນທັງຫລາຍ.
11ແນ່ນອນ, ຂໍໃຫ້ກະສັດທັງຫມົດກົ້ມກາບລົງຕໍ່ຫນ້າທ່ານ; ຂໍໃຫ້ຊົນຊາດທັງຫມົດຮັບໃຊ້ທ່ານ. 12ເພາະທ່ານຊ່ວຍເຫລືອຄົນຂັດສົນຜູ້ຮ້ອງຂໍ ແລະ
ຄົນຍາກຈົນຜູ້ທີ່ບໍ່ມີຄົນຊ່ວຍເຫລືອ.
13ທ່ານເມດຕາຄົນຍາກຈົນແລະຄົນຂັດສົນ, ແລະທ່ານຊ່ວຍຊີວິດຄົນຂັດສົນ. 14ທ່ານໄຖ່ຊີວິດຂອງພວກເຂົາຈາກການບີບບັງຄັບແລະຄວາມກົດຂີ່,
ແລະໂລຫິດຂອງພວກເຂົາກໍມີຄ່າໃນສາຍຕາຂອງທ່ານ.
15ຂໍໃຫ້ທ່ານມີຊີວິດຍືນຍາວ! ຂໍໃຫ້ທ່ານໄດ້ຮັບທອງແຫ່ງເຊບາ. ຂໍໃຫ້ປະຊາຊົນອະທິຖານເພື່ອທ່ານຢູ່ສະເຫມີ; ຂໍພຣະເຈົ້າຊົງອວຍພອນທ່ານ
ຕະຫລອດວັນຮອດຄໍ່າ. 16ຂໍໃຫ້ມີເຂົ້າອຸດົມສົມບູນໃນແຜ່ນດິນ; ຂໍໃຫ້ພືນລະປູກເຫລົ່ານັ້ນເຄື່ອນໄຫວເທິງຍອດເຂົາທັງຫລາຍ. ຂໍໃຫ້ປະຊາຊົນ
ຈະເຣີນງອກງາມຂຶ້ນໃນເມືອງທັງຫລາຍຄືຫຍ້າແຫ່ງທ້ອງທົ່ງ.
17ຂໍໃຫ້ຊື່ຂອງທ່ານດໍາຣົງຢູ່ເປັນນິດ; ຂໍໃຫ້ຊື່ຂອງທ່ານຍັ້ງຍືນຢ່າງດວງອາທິດ; ຂໍໃຫ້ປະຊາຊົນໄດ້ຮັບພອນໃນທ່ານ; ຂໍໃຫ້ປະຊາຊາດທັງຫມົດ
ຮ້ອງທ່ານວ່າຜູ້ໄດ້ຮັບພຣະພອນ.
18ຂໍໃຫ້ພຣະຢາເວ, ພຣະເຈົ້າ, ຂອງອິສະຣາເອນໄດ້ຮັບການຖວາຍຄໍາສັນຣະເສີນ, ພຣະອົງຜູ້ຊົງກະທໍາສິ່ງອັສະຈັນທັງຫລາຍແຕ່ພຣະອົງດຽວ.
19ສັນຣະເສີນແດ່ພຣະນາມຊື່ອັນຊົງສະງ່າຣາສີຕະຫລອດໄປເປັນນິດ, ແລະຂໍໃຫ້ແຜ່ນດິນໂລກທັງຫມົດເຕັມໄປດ້ວຍພຣະສະຫງ່າຣາສີຂອງພ
ຣະອົງ. ອາແມນ,ແລະອາແມນ. 20ຄໍາພາວັນນາອະທິຖານທັງຫລາຍຂອງດາວິດຜູ້ເປັນລູກຂອງເຢຊີໄດ້ຈົບລົງແລ້ວ. ຫນັງສືເຫລັ້ມສາມ


generated on Tue Jun 17 19:01:42 2025

73 ບົດເພງສັນຣະເສີນຂອງອາສາບ.[1]ພຣະເຈົ້າຊົງດີຕໍ່ອິສະຣາເອນ, ຕໍ່ບັນດາຜູ້ມີໃຈບໍຣິສຸດ.[2]ແຕ່ສ່ວນຂ້ານ້ອຍ, ຕີນຂອງຂ້ານ້ອຍເກືອບລື່ນ
ໄຫລ; ຕີນຂອງຂ້ານ້ອຍຫມົດສິ້ນຈາກພາຍໃນຂ້າມອັຍ[3]ເພາະຂ້ານ້ອຍໄດ້ອິດສາຄົນຈອງຫອງເມື່ອຂ້ານ້ອຍໄດ້ເຫັນຄວາມຈະເຣີນຮັ່ງມີ
ຂອງຄົນຊົ່ວ.

[4]ເພາະເຂົາທັງຫລາຍບໍ່ມີຄວາມເຈັບປວດໄປຈົນເຖິງຄວາມຕາຍຂອງພວກເຂົາ, ແຕ່ພວກເຂົາກັບແຂງແຮງແລະໄດ້ຮັບການລ້ຽງດູຢ່າງດີ.[5]ເຂົາທັງ
ຫລາຍພົ້ນຈາກພາຣະທັງຫລາຍຢ່າງຄົນອື່ນໆ; ພວກເຂົາບໍ່ຕ້ອງທຸກໃຈຢ່າງຄົນອື່ນໆ.
[6]ຄວາມຈອງຫອງຈຶ່ງເປັນດັ່ງສາຍຄໍປະດັບຮອບຄໍຂອງພວກເຂົາ; ຄວາມຂົ່ມເຫັງຄຸມພວກເຂົາໄວ້ຄືຢ່າງເສື້ອຄຸມ.[7]ເພາະຄວາມມືດບອດແບບນັ້ນ
ເຮັດໃຫ້ຄວາມບາບເຂົ້າມາ, ຄວາມຄິດຊົ່ວຮ້າຍທັງຫລາຍຜ່ານເຂົ້າມາໃນໃຈພວກເຂົາ.
[8]ພວກເຂົາຫົວຂວັນແລະເວົ້າຊົ່ວຮ້າຍ; ໃນຄວາມຈອງຫອງຂອງພວກເຂົາ ພວກເຂົາຂູ່ວ່າຈະບີບບັງຄັບ.[9]ເຂົາທັງຫລາຍອ້າປາກສູ້ຟ້າສະຫວັນ,
ແລະລີ້ນຂອງພວກເຂົາກໍເລາະໄປໃນໂລກ.
[10]ເພາະສະນັ້ນປະຊາຊົນຂອງພຣະອົງຈຶ່ງຫັນໄປຫາພວກເຂົາແລະນ້ຳທີ່ອຸດົມສົມບູນກໍແຫ້ງໄປ.[11]ພວກເຂົາເວົ້າວ່າ "ພຣະເຈົ້າຊົງຮູ້ໄດ້ຢ່າງໃດ? ພ
ຣະເຈົ້າຜູ້ສູງສຸດມີຄວາມຮູ້ບໍ່?"[12]ຈົ່ງຣະວັງ: ພວກຄົນເຫລົ່ານີ້ເປັນຄົນຊົ່ວ; ພວກເຂົາສະບາຍຢູ່ສະເຫມີ, ກຳລັງມັ່ງຄັ່ງສົມບູນແລະມີຫລາຍ
ຂຶ້ນເລື້ອຍໆ.
[13]ເປັນການບໍ່ມີປະໂຫຍດທີ່ຂ້ານ້ອຍໄດ້ປົກປ້ອງຈິດໃຈຂອງຂ້ານ້ອຍໄວ້ແລະໄດ້ຊຳຣະມືຂອງຂ້ານ້ອຍດ້ວຍຄວາມບໍຣິສຸດ.[14]ເພາະຂ້ານ້ອຍໄດ້ຮັບ
ຄວາມທຸກທໍຣະມານຕະຫລອດວັນຍັງຄ່ຳແລະຖືກຕີສອນຢູ່ທຸກເຊົ້າ.[15]ຖ້າຂ້ານ້ອຍໄດ້ກ່າວວ່າ, "ຂ້ານ້ອຍຈະເວົ້າເຊັ່ນນີ້," ແລ້ວຂ້ານ້ອຍກໍຄົງບໍ່ໄດ້
ປະຕິບັດຕໍ່ພວກລູກຊາຍຂອງພຣະອົງໃນຊົ່ວອາຍຸນີ້.
[16]ເຖິງແມ່ນວ່າຂ້ານ້ອຍໄດ້ພະຍາຍາມເຮັດຄວາມເຂົ້າໃຈສິ່ງເຫລົ່ານີ້, ແຕ່ກໍຍາກເກີນໄປສຳລັບຂ້ານ້ອຍ.[17]ແລ້ວຂ້ານ້ອຍໄດ້ເຂົ້າໄປໃນສະຖານ
ທີ່ນະມັສະການຂອງພຣະເຈົ້າ, ແລະຈຶ່ງໄດ້ເຂົ້າໃຈເຖິງປາຍທາງຂອງພວກເຂົາ.
[18]ພຣະອົງຊົງວາງພວກເຂົາໄວ້ໃນທີ່ຈະພະລາດມື່ນ; ພຣະອົງຊົງນຳພວກເຂົາລົງໄປສູ່ຄວາມພິນາດ.[19]ພວກເຂົາຊ່າງກາຍເປັນຖິ່ນແຫ້ງແລ້ງກັນ
ດານໄດ້ໃນທັນທີ! ພວກເຂົາມາເຖິງຈຸດຈົບແລະໄດ້ສິ້ນສຸດລົງໃນຄວາມຢ້ານທີ່ໂຫດຮ້າຍ.[20]ຂ້າແດ່ພຣະຜູ້ເປັນເຈົ້າ, ພວກເຂົາເປັນດັ່ງຄວາມຝັນທີ່
ຫາຍໄປເມື່ອຕື່ນຂຶ້ນ; ເມື່ອພຣະອົງຊົງຕື່ນຂຶ້ນ, ພຣະອົງກໍຈະບໍ່ຊົງຄິດເຖິງຄວາມຝັນເຫລົ່ານັ້ນເລີຍ.
[21]ເພາະຈິດໃຈຂອງຂ້ານ້ອຍໂສກເສົ້າ, ແລະຂ້ານ້ອຍເຈັບປວດຂົມຂື່ນໃນຈິດວິນຍານ.[22]ຂ້ານ້ອຍບໍ່ຮູ້ແລະຂາດຄວາມເຂົ້າໃຈ; ຂ້ານ້ອຍໄດ້ເປັນຄື
ສັດທີ່ບໍ່ມີຄວາມຮູ້ສຶກຕໍ່ພຣະພັກພຣະອົງ.
[23]ແຕ່ປານນັ້ນກໍດີ ຂ້ານ້ອຍຢູ່ກັບພຣະອົງສະເຫມີ; ພຣະອົງຊົງຈັບມືຂວາຂອງຂ້ານ້ອຍໄວ້.[24]ພຣະອົງຊົງນຳຂ້ານ້ອຍດ້ວຍຄຳແນະນຳຂອງພຣະອົງ
ແລະພາຍຫລັງກໍຊົງຮັບຂ້ານ້ອຍໄປສູ່ກຽດຕິຍົດ.
[25]ນອກຈາກພຣະອົງແລ້ວ, ຂ້ານ້ອຍມີໃຜໃນຟ້າສະຫວັນບໍ່? ນອກຈາກພຣະອົງແລ້ວ ບໍ່ມີຜູ້ໃດເທິງໂລກທີ່ຂ້ານ້ອຍປຣາຖນາ.[26]ເນື້ອຫນັງແລະຈິດ
ໃຈຂອງຂ້ານ້ອຍກໍອິດເມື່ອຍ ແຕ່ພຣະເຈົ້າ, ຊົງເປັນກຳລັງແຫ່ງຈິດໃຈຂອງຂ້ານ້ອຍຕະຫລອດໄປ.
[27]ບັນດາຜູ້ທີ່ຫ່າງເຫີນຈາກພຣະອົງ, ກໍຈະພິນາດໄປ ພຣະອົງຈະຊົງທຳລາຍບັນດາຜູ້ບໍ່ຊື່ສັດຕໍ່ພຣະອົງ.[28]ແຕ່ສ່ວນຂ້ານ້ອຍ, ທັງຫມົດທີ່ຂ້ານ້ອຍ
ຈະເຮັດກໍຄືການເຂົ້າໃກ້ພຣະເຈົ້າ. ຂ້ານ້ອຍໄດ້ໃຫ້ພຣະຢາເວພຣະຜູ້ເປັນເຈົ້າ, ຊົງເປັນທີ່ລີ້ພັຍຂອງຂ້ານ້ອຍ. ຂ້ານ້ອຍຈະປະກາດເຖິງທຸກສິ່ງທີ່ພ
ຣະອົງໄດ້ຊົງກະທຳ.

 generated on Tue Jun 17 19:01:42 2025

74 ບົດຄວາມຂອງອາສາບ.[1]ຂ້າແດ່ພຣະເຈົ້າ, ເຫດໃດພຣະອົງຊົງປະຕິເສດຂ້ານ້ອຍທັງຫລາຍເປັນນິດ? ເຫດໃດຄວາມຄຽດຮ້າຍຂອງພຣະ
ອົງເຜົາຜານແກະແຫ່ງທົ່ງຫຍ້າຂອງພຣະອົງ?[2]ຂໍຊົງຣະນຶກເຖິງປະຊາຊົນຂອງພຣະອົງ, ຜູ້ຊຶ່ງພຣະອົງໄດ້ຊົງຊື້ມາໃນສມັຍບູຮານ ເປັນເຜົ່າ
ທີ່ພຣະອົງໄດ້ຊົງໄຖ່ໄວ້ໃຫ້ເປັນມໍຣະດົກຂອງພຣະອົງເອງ, ແລະຂໍຊົງລະນຶກເຖິງພູເຂົາຊີໂອນທີ່ຊຶ່ງພຣະອົງຢູ່ນັ້ນ.

[3]ຂໍຍ່າງເລາະເບິ່ງສິ່ງທີ່ຫັກເພພັງ, ແລະຄວາມເສຍຫາຍທັງຫມົດທີ່ສັດຕຣູນັ້ນໄດ້ເຮັດໃນສະຖານທີ່ບໍຣິສຸດ.[4]ພວກສັດຕຣູຂອງພຣະອົງໄດ້ຮ້ອງຢູ່
ກາງສະຖານທີ່ພຣະອົງໄດ້ຊົງຕັ້ງໄວ້; ພວກເຂົາໄດ້ປັກທຸງຮົບຂອງພວກເຂົາຂຶ້ນ.[5]ພວກເຂົານັ້ນເປັນເຫມືອນຄົນຕັດໄມ້ ບຸກເຂົ້າໄປຟັນໄມ້ດ້ວຍ
ຂວານ.[6]ພວກເຂົາທຸບຕີແລະພັງໄມ້ແກະສະລັກທັງຫມົດລົງ; ພວກເຂົາພັງສິ່ງເຫລົ່ານັ້ນດ້ວຍຂວານແລະຄ້ອນ.
[7]ເຂົາທັງຫລາຍເອົາໄຟຈູດສະຖານນະມັສະການຂອງພຣະອົງ; ພວກເຂົາເຮັດໃຫ້ສະຖານທີ່ຢູ່ຂອງພຣະອົງ, ເປັນມົນທິນໄປພັງລົງຈົນເຖິງດິນ.
[8]ເຂົາທັງຫລາຍໄດ້ຄິດໃນໃຈວ່າ, "ເຮົາຈະທຳລາຍພວກເຂົາທັງຫມົດ." ພວກເຂົາຈູດເຜົາສະຖານທີ່ປະຊຸມຂອງພຣະອົງທັງຫມົດໃນແຜ່ນດິນ.
[9]ພວກເຮົາບໍ່ເຫັນບັນດາຫມາຍສຳຄັນທັງຫລາຍອີກເລີຍ; ບໍ່ມີຜູ້ທຳນວຍອີກແລ້ວ, ແລະບໍ່ມີແມ່ນແຕ່ຄົນດຽວໃນພວກເຮົາທີ່ຮູ້ວ່າສິ່ງນີ້ຈະເກີດຂຶ້ນ
ອີກດົນປານໃດ.[10]ຂ້າແດ່ພຣະເຈົ້າ, ສັດຕຣູນັ້ນຈະດູຫມິ່ນພຣະອົງຢູ່ດົນປານໃດ? ສັດຕຣູຈະຫມິ່ນປະຫມາດພຣະນາມຊື່ພຣະອົງເປັນນິດບໍ່?
[11]ດ້ວຍເຫດໃດພຣະອົງຈຶ່ງຢັ້ງມືຂອງພຣະອົງໄວ້ ຄືມືຂວາຂອງພຣະອົງ? ຂໍຍື່ນມືຂວາຂອງພຣະອົງຈາກຫລັງຂອງພຣະອົງແລະທຳລາຍພວກເຂົາ
ເຖີດ.
[12]ເຖິງປານນັ້ນ ພຣະເຈົ້າ, ຜູ້ເປັນກະສັດຂອງພວກຂ້ານ້ອຍຕັ້ງແຕ່ບູຮານ ຊົງນຳຄວາມພົ້ນມາເທິງແຜ່ນດິນໂລກ.[13]ພຣະອົງໄດ້ຊົງແຍກທະເລດ້ວຍ
ຣິທານຸພາບຂອງພຣະອົງ, ພຣະອົງຊົງທຸບບັນດາຫົວຂອງສັດທະເລທີ່ມາໃນນ້ຳ.
[14]ພຣະອົງໄດ້ຊົງຢຽບຫົວມັງກອນທີ່ຊື່ວ່າເລວີອາທານ ພຣະອົງ ຊົງໃຫ້ມັນກາຍເປັນອາຫານແກ່ບັນດາສັດທີ່ອາສັຍໃນຖິ່ນແຫ້ງແລ້ງກັນດານ.[15]ພ
ຣະອົງເອງຊົງທຸບຕານ້ຳພຸແລະລຳທານທັງຫລາຍໃຫ້ເປີດອອກພຣະອົງ, ໄດ້ຊົງເຮັດໃຫ້ແມ່ນ້ຳທີ່ໄຫລຢູ່ແຫ້ງໄປ.
[16]ວັນເປັນຂອງພຣະອົງ, ແລະຄືນກໍເປັນຂອງພຣະອົງເຊັ່ນກັນ; ພຣະອົງເອງຊົງຕັ້ງດວງອາທິດແລະດວງເດືອນໄວ້ໃນທີ່ຂອງມັນ.[17]ພຣະອົງຊົງຈັດ
ເຂດແດນທັງຫລາຍຂອງແຜ່ນດິນໂລກ; ພຣະອົງເອງໄດ້ຊົງສ້າງຣະດູຮ້ອນແລະຣະດູຫນາວ.
[18]ຂ້າແດ່ພຣະຢາເວ, ຂໍຊົງຣະນຶກເຖິງການທີ່ສັດຕຣູໄດ້ຫົວຂວັນໃສ່ພຣະອົງ, ແລະຊົນຊາດໂງ່ຈ້າໄດ້ຫມິ່ນປະມາດຕໍ່ພຣະນາມຊື່ຂອງພຣະອົງ.
[19]ຂໍຢ່າຊົງມອບຊີວິດນົກເຂົາຂອງພຣະອົງແກ່ສັດປ່າ. ຂໍຢ່າຊົງລືມຊີວິດຂອງປະຊາກອນທີ່ຖືກກົດຂີ່ຂອງພຣະອົງເປັນນິດ.
[20]ຂໍຊົງຣະນຶກເຖິງພັນທະສັນຍາຂອງພຣະອົງ, ເພາະບັນດາເຂດແດນທີ່ມືດຂອງແຜ່ນດິນເຕັມໄປດ້ວຍບັນດາທີ່ອາສັຍຂອງຄວາມຮຸນແຮງ.[21]ຂໍຢ່າ
ໃຫ້ຜູ້ທີ່ຖືກກົດຂີ່ຕ້ອງກັບໄປດ້ວຍຄວາມຂາຍຫນ້າ; ຂໍໃຫ້ຄົນຍາກຈົນແລະຄົນຖືກກົດຂີ່ສັນຣະເສີນພຣະນາມຊື່ຂອງພຣະອົງ.
[22]ຈົ່ງລຸກຂຶ້ນ, ຂ້າແດ່ພຣະເຈົ້າ; ຂໍຊົງລຸກຂຶ້ນປົກປ້ອງກຽດຂອງພຣະອົງ; ຂໍຊົງຣະນຶກວ່າພວກຄົນໂງ່ຈ້າຫົວຂວັນໃສ່ພຣະອົງຢູ່ວັນຍັງຄ່ຳ.[23]ຂໍຢ່າຊົງ
ລືມສຽງພວກສັດຕຣູຂອງພຣະອົງ ຫລືສຽງຮ້າຍກາດຂອງບັນດາຜູ້ທີ່ທ້າທາຍພຣະອົງຢ່າງຕໍ່ເນື່ອງ.

 generated on Tue Jun 17 19:01:42 2025

75 ສຳລັບຄະນະນັກດົນຕຣີ; ສົ່ງເຖິງທາເຊັດ. ບົດເພງສັນຣະເສີນຂອງອາສາບ, ບົດເພງ.[1]ຂ້າແດ່ພຣະເຈົ້າ, ພວກຂ້ານ້ອຍຂອບພຣະຄຸນພຣະ
ອົງ; ພວກຂ້ານ້ອຍຂໍຂອບພຣະຄຸນ, ເພາະພຣະອົງຊົງສຳແດງເຖິງການຊົງສະຖິດຂອງພຣະອົງ; ເຫລົ່າປະຊາຊົນຕ່າງເລົ່າເຖິງການອັສະຈັນ
ຂອງພຣະອົງ.[2]ເມື່ອເຖິງເວລາຫນຶ່ງແລ້ວ ເຮົາຈະຕັດສິນຢ່າງຍຸຕິທັມ.[3]ແມ່ນວ່າແຜ່ນດິນໂລກແລະບັນດາຜູ້ຢູ່ອາສັຍທັງຫມົດຈະສັ່ນດ້ວຍຄວາມ
ຢ້ານ, ເຮົາເຮັດໃຫ້ບັນດາເສົາຫລັກຂອງແຜ່ນດິນໂລກຫມັ້ນຄົງ. ເສລາ

[4]ເຮົາເວົ້າກັບຄົນຈອງຫອງວ່າ, "ຢ່າຈອງຫອງ," ແລະກັບຄົນຊົ່ວວ່າ, "ຢ່າຍົກເຂົາເຂົາຂຶ້ນ.[5]ຢ່າຍົກເຂົາຂອງເຈົ້າຂຶ້ນໃຫ້ສູງ; ຢ່າເວົ້າອວດດີ"
ແລະບອກພວກເຂົາໃຫ້ຢຸດອວດອ້າງ."[6]ເພາະການຕັດສິນບໍ່ໄດ້ມາຈາກທິດຕາເວັນອອກຫລືຈາກທິດຕາເວັນຕົກ ມັນບໍ່ໄດ້ມາຈາກທິດເຫນືອ
ຫລືທິດໃຕ້ມັນບໍ່ໄດ້ມາຈາກຖິ່ນແຫ້ງແລ້ງກັນດານ.
[7]ແຕ່ພຣະເຈົ້າເປັນຜູ້ພິພາກສາ, ພຣະອົງຊົງເຮັດໃຫ້ລົງ ແລະພຣະອົງຊົງຍົກຂຶ້ນ.[8]ເພາະພຣະຢາເວ ຊົງຖືຈອກໃບຫນຶ່ງທີ່ມີເຫລົ້າອະງຸ່ນເປັນຟອງ
ຊຶ່ງຖືກປະສົມດ້ວຍເຄື່ອງເທດຕ່າງໆ. ແລະຊົງເທອອກ ຄົນຊົ່ວທັງປວງຂອງແຜ່ນດິນໂລກຈະດື່ມມັນຈົນຢົດສຸດທ້າຍ.
[9]ແຕ່ຂ້ານ້ອຍຈະເລົ່າເຖິງສິ່ງທີ່ພຣະອົງ; ໄດ້ຊົງເຮັດຢູ່ເລື້ອຍ ໄປຂ້ານ້ອຍຈະຮ້ອງສັນຣະເສີນແດ່ພຣະເຈົ້າຂອງຢາໂຄບ.[10]ພຣະອົງຊົງບອກວ່າ,
"ເຮົາຈະຕັດບັນດາເຂົາຂອງຄົນຊົ່ວທັງຫມົດ, ແຕ່ບັນດາເຂົາຂອງຄົນຊອບທັມຈະຖືກຍົກຂຶ້ນ."


generated on Tue Jun 17 19:01:42 2025

76 ສຳລັບຄະນະນັກດົນຕຣີ, ກ່ຽວກັບເຄື່ອງດົນຕຣີທັງຫລາຍ. ບົດເພງສັນຣະເສີນຂອງອາສາບ, ເປັນບົດເພງ.[1]ພຣະເຈົ້າໄດ້ຊົງເຮັດໃຫ້ພຣະ
ອົງເປັນທີ່ຮູ້ຈັກໃນຢູດາ; ພຣະນາມຊື່ຂອງພຣະອົງໃຫຍ່ຫລາຍໃນອິສະຣາເອນ.[2]ທີ່ຢູ່ຂອງພຣະອົງຢູ່ໃນຊາເລັມ; ທີ່ຊົງສະຖິດຂອງພຣະອົງຢູ່
ໃນຊີໂອນ.[3]ພຣະອົງຊົງຫັກບັນດາລູກທະນູ, ໂລ້, ດາບ, ແລະບັນດາອາວຸດອື່ນໆ ແຫ່ງສົງຄາມ. ເສລາ

[4]ພຣະອົງຊົງສ່ອງແສງສະຫວ່າງແລະຊົງສຳແດງສະຫງ່າຣາສີຂອງພຣະອົງ, ເມື່ອພຣະອົງລົງມາຈາກພູເຂົາ, ທີ່ຊຶ່ງພຣະອົງໄດ້ຊົງປຣະຫານບັນ
ດາເຫຍື່ອຂອງພຣະອົງ.[5]ບັນດາຄົນໃຈກ້າໄດ້ຖືກຮິບເຂົ້າຂອງ; ພວກເຂົາໄດ້ລ່ວງລັບໄປ. ບັນດານັກຮົບທັງຫມົດຕ່າງຂາດຄວາມຊ່ວຍເຫລືອ.
[6]ຂ້າແດ່ພຣະເຈົ້າ, ຂອງຢາໂຄບ, ພໍພຣະອົງຊົງສັ່ງສອນ ທັງຜູ້ຂີ່ມ້າແລະມ້າກໍລ່ວງລັບໄປ.[7]ແຕ່ພຣະອົງເຈົ້າ, ພຣະອົງຊົງເປັນທີ່ນ່າຢ້ານກົວຢຳເກງ;
ເມື່ອພຣະອົງໂກດຮ້າຍ ບໍ່ມີໃຜສາມາດຢືນຢູ່ຊ້ອງຫນ້າພຣະອົງໄດ້?
[8]ພຣະອົງໄດ້ຊົງລັ່ນຄຳຕັດສິນຂອງພຣະອົງ; ໃຫ້ໄດ້ຍິນຈາກຟ້າສະຫວັນ ແຜ່ນດິນໂລກກໍຢ້ານແລະມິດງຽບ.[9]ຂ້າແດ່ພຣະເຈົ້າ, ເມື່ອພຣະອົງຊົງ
ລຸກຂຶ້ນ, ເຮັດການຕັດສິນແລະຊ່ວຍບັນດາຜູ້ຖືກກົດຂີ່ແຫ່ງແຜ່ນດິນໂລກທັງຫມົດໃຫ້ພົ້ນ.
[10]ແນ່ນອນ ການຕັດສິນດ້ວຍຄວາມໂກດຮ້າຍຂອງພຣະອົງຕໍ່ມະນຸດຈະນຳການສັນຣະເສີນມາສູ່ພຣະອົງ; ພຣະອົງຊົງຄາດພຣະອົງເອງດ້ວຍສິ່ງ
ທີ່ຫລົງເຫລືອຈາກຄວາມໂກດຮ້າຍຂອງພຣະອົງ.
[11]ຈົ່ງປະຕິຍານຕໍ່ພຣະຢາເວພຣະເຈົ້າ. ຂອງທ່ານແລະຮັກສາຄຳສັນຍາເຫລົ່ານັ້ນໄວ້ ໃຫ້ທຸກຄົນທີ່ຢູ່ອ້ອມພຣະອົງນຳບັນດາຂອງຖວາຍມາຍັງພ
ຣະອົງຜູ້ຊຶ່ງເປັນທີ່ຢຳເກງ.[12]ພຣະອົງຊົງຕັດວິນຍານຂອງບັນດາເຈົ້ານາຍອອກໄປເສຍ; ພຣະອົງຊົງເປັນທີ່ຢຳເກງຕໍ່ບັນດາກະສັດແຫ່ງແຜ່ນດິນ
ໂລກ.


generated on Tue Jun 17 19:01:42 2025

77 ສຳລັບຄະນະນັກດົນຕຣີ; ຫລັງຈາກລັກສະນະຂອງເຈດູທັນ. ບົດເພງສັນຣະເສີນຂອງອາສາບ. [1]ຂ້ານ້ອຍຮ້ອງທຸກຕໍ່ພຣະເຈົ້າ; ດ້ວຍສຽງ
ຂອງຂ້ານ້ອຍ ຂ້ານ້ອຍຮ້ອງຫາຕໍ່ພຣະເຈ້າດ້ວຍສຽງຂອງຂ້ານ້ອຍ ແລະພຣະເຈົ້າ, ຂອງຂ້ານ້ອຍຈະຊົງຟັງສຽງຂ້ານ້ອຍ.

[2]ໃນວັນແຫ່ງຄວາມຍາກລຳບາກຂອງຂ້ານ້ອຍ ຂ້ານ້ອຍໄດ້ສະແຫວງຫາອົງພຣະຜູ້ເປັນເຈົ້າ; ຍາມຄ່ຳຄືນ ຂ້ານ້ອຍໄດ້ຍືນມືຂອງຂ້ານ້ອຍເຂົ້າ
ອອກ, ແລະມືນັ້ນບໍ່ອິດເມື່ອຍເລີຍ ຈິດໃຈຂອງຂ້ານ້ອຍບໍ່ຍອມຮັບການປອບໂຍນ. [3]ຂ້ານ້ອຍໄດ້ຣະນຶກເຖິງພຣະເຈົ້າເມື່ອຂ້ານ້ອຍໄດ້ຕຶກຕອງ; ຂ້າ
ນ້ອຍໄດ້ຣະນຶກເຖິງພຣະອົງເມື່ອຂ້ານ້ອຍອ່ອນກຳລັງ. ເສລາ
[4]ພຣະອົງໄດ້ຊົງຈັບຫນັງຕາຂອງຂ້ານ້ອຍໃຫ້ເປີດອອກ; ຂ້ານ້ອຍທຸກໃຈເກີນກວ່າທີ່ຈະເວົ້າໄດ້. [5]ຂ້ານ້ອຍໄດ້ຣະນຶກເຖິງວັນເກົ່າໆ, ເຖິງເວລາທີ່
ຜ່ານໄປນານແລ້ວ.
[6]ໃນຍາມກາງຄືນ ຂ້ານ້ອຍຣະນຶກເຖິງບົດເພງທີ່ຂ້ານ້ອຍເຄີຍຮ້ອງ. ຂ້ານ້ອຍໄດ້ຄິດຕຶກຕອງແລະໄດ້ພະຍາຍາມເຂົ້າໃຈໃນສິ່ງທີ່ເຄີຍເກີດຂຶ້ນມາ
ແລ້ວ. [7]ອົງພຣະຜູ້ເປັນເຈົ້າຈະຊົງຖິ້ມຂ້ານ້ອຍເປັນນິດບໍ? ພຣະອົງຈະບໍ່ຊົງເມດຕາຂ້ານ້ອຍອີກເລີຍບໍ?
[8]ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງໄດ້ຫມົດສິ້ນໄປເປັນນິດແລ້ວບໍ? ຄຳສັນຍາຂອງພຣະອົງໄດ້ລົ້ມເລີກໄປເປັນນິດແລ້ວບໍ? [9]ພຣະເຈົ້າໄດ້ຊົງ
ລືມທີ່ຈະເມດຕາແລ້ວບໍ? ຄວາມໃຈຮ້າຍຂອງພຣະອົງໄດ້ປິດບັງຄວາມເມດຕາຂອງພຣະອົງໄປແລ້ວບໍ? ເສລາ
[10]ຂ້ານ້ອຍກ່າວວ່າ, "ນີ້ແຫລະຄືຄວາມທຸກໂສກຂອງຂ້ານ້ອຍ: ຄືການປ່ຽນໄປຂອງມືຂວາຂອງຜູ້ສູງສຸດທີ່ມີຕໍ່ພວກເຮົາ."
[11]ຂ້າແດ່ພຣະຢາເວ, ແຕ່ຂ້ານ້ອຍຈະຣະນຶກເຖິງການກະທຳທັງຫລາຍຂອງພຣະອົງ; ຂ້ານ້ອຍຈະຣະນຶກເຖິງບັນດາການກະທຳອັສະຈັນຂອງພ
ຣະອົງໃນສມັຍບູຮານ. [12]ຂ້ານ້ອຍຈະນຶກເຖິງການກະທຳທັງຫມົດຂອງພຣະອົງແລະຈະຕຶກຕອງເຖິງສິ່ງເຫລົ່ານັ້ນ.
[13]ຂ້າແດ່ພຣະເຈົ້າ, ທຸກສິ່ງຂອງພຣະອົງບໍຣິສຸດ, ພຣະອົງໃຜຈະທຽບກັບພຣະເຈົ້າ, ຜູ້ຍິ່ງໃຫຍ່ຂອງຂ້ານ້ອຍທັງຫລາຍໄດ້ບໍ? [14]ພຣະອົງຄືພຣະ
ເຈົ້າຜູ້ຊົງເຮັດການອັສະຈັນທັງຫລາຍ; ພຣະອົງໄດ້ຊົງສຳແດງຣິທານຸພາບຂອງພຣະອົງໃນທ່າມກາງຊົນຊາດທັງຫລາຍ. [15]ພຣະອົງໄດ້ຊົງປຣະ
ທານຊັຍຊະນະແກ່ປະຊາກອນຂອງພຣະອົງ, ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ - ຄືແກ່ບັນດາລູກຫລານຂອງຢາໂຄບແລະໂຢເຊັບ.
ເສລາ
[16]ຂ້າແດ່ພຣະເຈົ້າ, ທະເລໄດ້ເຫັນພຣະອົງ; ທະເລໄດ້ເຫັນພຣະອົງ, ແລະພວກມັນກໍຢ້ານກົວ; ບັນດາທີ່ເລິກກໍສັ່ນສະເທືອນ. [17]ບັນດາເມກເທນ້ຳ
ລົງມາ; ບັນດາທ້ອງຟ້າກໍຮ້ອງສຽງ; ບັນດາລູກທະນູຂອງພຣະອົງກໍປິ້ວໄປ.
[18]ສຽງຟ້າຮ້ອງຂອງພຣະອົງໄດ້ຍິນຢູ່ໃນພາຍຸ; ຟ້າແມບເຮັດໃຫ້ທັງໂລກສະຫວ່າງ; ແຜ່ນດິນໂລກກໍໄດ້ສັ່ນສະເທືອນ. [19]ພຣະອົງຍ່າງເທິງຄື້ນນ້ຳ
ຂ້ວາມທ້ອງທະເລໄປ, ແຕ່ຮອຍບາດຍ່າງຂອງພຣະອົງກໍເບິ່ງບໍ່ເຫັນ. [20]ພຣະອົງໄດ້ຊົງນຳປະຊາກອນຂອງພຣະອົງດັ່ງນຳຝູງແບ້ ແກະ ໂດຍມືຂອງ
ໂມເຊແລະອາໂຣນ.

78 ບົດຄວາມຂອງອາສາບ.[1]ປະຊາກອນຂອງຂ້າເອີຍ, ຈົ່ງຟັງຄຳສອນຂອງຂ້າ, ຈົ່ງຟັງບັນດາຖ້ອຍຄຳແຫ່ງປາກຂ້າ.[2]ຂ້າຈະອ້າປາກກ່າວບັນດາ
ຄຳເລິກລັບ; ຂ້າຈະຮ້ອງເພງເຖິງບັນດາສິ່ງທີ່ຖືກເຊື່ອງໄວ້ໃນອາດີດ.

[3]ເຫລົ່ານີ້ຄືບັນດາສິ່ງທີ່ເຮົາເຄີຍໄດ້ຍິນແລະໄດ້ຮຽນຮູ້ມາແລ້ວ, ເຖິງບັນດາສິ່ງທີ່ເຊື້ອສາຍຂອງເຮົາໄດ້ບອກເຮົາ.[4]ເຮົາຈະບໍ່ເຊື່ອງສິ່ງເຫລົ່ານັ້ນໄວ້
ຈາກບັນດາລູກຫລານຂອງພວກເຂົາ. ເຮົາຈະບອກແກ່ຄົນຮຸ່ນຖັດໄປເຖິງບັນດາການກະທຳອັນຫນ້າສັນຣະເສີນຂອງພຣະຢາເວ, ຣິທານຸພາບ
ຂອງພຣະອົງ, ແລະການອັສະຈັນຕ່າງໆ ຊຶ່ງພຣະອົງໄດ້ຊົງກະທຳ.
[5]ເພາະພຣະອົງໄດ້ຊົງມອບບັນດາກົດບັນຍັດໄວ້ໃນຢາໂຄບແລະຊົງຕັ້ງຂໍ້ຄຳສັ່ງໄວ້ໃນອິສະຣາເອນ. ພຣະອົງໄດ້ຊົງບັນຊາແກ່ບັນດາເຊື້ອສາຍຂອງ
ເຮົາວ່າພວກເຂົາຕ້ອງສອນເລື່ອງລາວເຫລົ່ານັ້ນແກ່ລູກຫລານຂອງພວກເຂົາ.[6]ພຣະອົງໄດ້ຊົງບັນຊາແບບນີ້ເພື່ອຄົນຮຸ່ນຕໍ່ໄປຈະໄດ້ຮູ້ເລື່ອງບັນດາ
ກົດບັນຍັດຂອງພຣະອົງ, ຄືລູກຫລານທີ່ຍັງບໍ່ເກີດມາ, ຜູ້ຊຶ່ງຄວນເລົ່າເລື່ອງລາວນັ້ນໃຫ້ແກ່ລູກຫລານຂອງພວກເຂົາຕໍ່ໄປອີກ.
[7]ແລ້ວພວກເຂົາຈະຕັ້ງຄວາມຫວັງຂອງພວກເຂົາ ໄວ້ໃນພຣະເຈົ້າ, ແລະບໍ່ລືມບັນດາການກະທຳຂອງພຣະອົງ ແຕ່ຮັກສາບັນດາຂໍ້ຄຳສັ່ງຂອງພ
ຣະອົງໄວ້.[8]ແລ້ວພວກເຂົາຈະບໍ່ເປັນເຫມືອນບັນພະບຸຣຸດຂອງພວກເຂົາ, ຜູ້ຊຶ່ງເປັນເຊື້ອຊາດທີ່ດື້ດ້ານແລະມັກຕົວະ ເປັນເຊື້ອຊາດທີ່ຈິດໃຈບໍ່ຖືກ
ຕ້ອງ, ແລະເປັນຜູ້ຊຶ່ງຈິດວິນຍານບໍ່ຖວາຍແລະຊື່ສັດຕໍ່ພຣະເຈົ້າ.
[9]ຄົນເອຟຣາອິມໄດ້ມີທະນູເປັນອາວຸດ, ແຕ່ພວກເຂົາໄດ້ຫັນໄປໃນວັນສົງຄາມ.[10]ເຂົາທັງຫລາຍບໍ່ໄດ້ຮັກສາພັນທະສັນຍາກັບພຣະເຈົ້າ, ແລະພວກ
ເຂົາໄດ້ປະຕິເສດທີ່ຈະເຮັດຕາມກົດບັນຍັດຂອງພຣະອົງ.[11]ພວກເຂົາໄດ້ລືມບັນດາການກະທຳຂອງພຣະອົງ ຄືບັນດາສິ່ງອັສະຈັນຕ່າງໆ ຊຶ່ງພຣະ
ອົງໄດ້ຊົງສຳແດງແກ່ພວກເຂົາ.
[12]ພວກເຂົາໄດ້ລືມສິ່ງອັສະຈັນທີ່ພຣະອົງໄດ້ຊົງກະທຳຕໍ່ຫນ້າຕໍ່ຕາບັນພະບຸຣຸດຂອງພວກເຂົາໃນແຜ່ນດິນເອຢິບ, ໃນທີ່ດິນຂອງໂຊອານ.[13]ພຣະອົງ
ໄດ້ຊົງແຍກນ້ຳທະເລແລະໄດ້ຊົງນຳພວກເຂົາຂ້ວາມທະເລໄປ ພຣະອົງ; ໄດ້ຊົງເຮັດໃຫ້ນ້ຳຕັ້ງຄືກຳແພງ.[14]ໃນກາງເວັນພຣະອົງໄດ້ຊົງນຳພວກເຂົາ
ດ້ວຍເມກແລະໃນຕະຫລອດທັງຄືນດ້ວຍແສງໄຟ.
[15]ພຣະອົງໄດ້ຊົງແຍກໂງ່ນຫີນໃນຖິ່ນແຫ້ງແລ້ງກັນດານ, ແລະພຣະອົງໄດ້ຊົງປຣະທານນ້ຳໃຫ້ພວກເຂົາດື່ມຢ່າງອຸດົມ, ພຽງພໍທີ່ຈະເຕີມບັນດາທີ່
ເລິກຂອງທະເລ.[16]ພຣະອົງໄດ້ຊົງເຮັດໃຫ້ນ້ຳໄດ້ໄຫລອອກມາຈາກຫີນຜາຊັນແລະໄດ້ຊົງເຮັດໃຫ້ນ້ຳໄຫລລົງມາຄືແມ່ນ້ຳທັງຫລາຍ.
[17]ແຕ່ພວກເຂົາຍັງໄດ້ເຮັດບາບຕໍ່ພຣະອົງ, ຢ່າງຕໍ່ເນື່ອງ ໄດ້ກະບົດຕໍ່ອົງຜູ້ສູງສຸດໃນຖິ່ນແຫ້ງແລ້ງກັນດານ.[18]ພວກເຂົາໄດ້ທ້າທ້າຍພຣະເຈົ້າ ໃນໃຈ
ຂອງເຂົາໂດຍຮຽກຮ້ອງຫາອາຫານເພື່ອເຮັດໃຫ້ຄວາມຫິວຂອງພວກເຂົາໄດ້ອີ່ມ.
[19]ພວກເຂົາໄດ້ເວົ້າຕໍ່ສູ້ພຣະເຈົ້າ; ພວກເຂົາໄດ້ເວົ້າວ່າ, "ພຣະເຈົ້າ, ຊົງຕຽມໂຕະໄວ້ສຳລັບພວກເຮົາໃນຖິ່ນແຫ້ງແລ້ງກັນດານໄດ້ບໍ?[20]ເບິ່ງເຖີດ
ເມື່ອພຣະອົງຊົງຕີຫີນ, ນ້ຳກໍໄດ້ພຸ່ງອອກມາແລະລຳນ້ຳທັງຫລາຍກໍໄຫລລົ້ນ ແຕ່ພຣະອົງ, ຊົງປຣະທານອາຫານໄດ້ບໍ? ພຣະອົງຈະຊົງຈັດເນື້ອ
ໃຫ້ປະຊາກອນຂອງພຣະອົງໄດ້ບໍ?"
[21]ເມື່ອພຣະຢາເວ, ຊົງຟັງເລື່ອງນີ້ແລ້ວ ພຣະອົງກໍຊົງໂກດຮ້າຍ, ດັ່ງນັ້ນໄຟຂອງພຣະອົງໄດ້ເຜົາຜານຢາໂຄບ, ແລະຄວາມໂກດຮ້າຍຂອງພຣະອົງ
ໄດ້ໂຈມຕີອິສະຣາເອນ,[22]ເພາະພວກເຂົາບໍ່ໄດ້ເຊື່ອໃນພຣະເຈົ້າແລະບໍ່ໄວ້ວາງໃຈໃນການຊ່ວຍໃຫ້ພົ້ນຂອງພຣະອົງ.
[23]ແຕ່ພຣະອົງຍັງໄດ້ສັ່ງບັນດາທ້ອງຟ້າເບື້ອງເທິງແລະເປີດບັນດາປະຕູແຫ່ງທ້ອງຟ້າທັງຫລາຍອອກ.[24]ພຣະອົງໄດ້ຊົງໂຜດສົ່ງເມັດເຂົ້າຄືມານາລົງ
ຈາກສະຫວັນ, ຕົກລົງມາໃຫ້ພວກເຂົາໄດ້ກິນອີ່ມທ້ອງ.[25]ປະຊາຊົນຕ່າງໆໄດ້ກິນອາຫານຂອງພວກທູດສະຫວັນ. ພຣະອົງໄດ້ຊົງສົ່ງອາຫານໃຫ້
ເຂົາຢ່າງສົມບູນ.
[26]ພຣະອົງໄດ້ຊົງເຮັດໃຫ້ລົມຕະເວັນອອກພັດໃນທ້ອງຟ້າ, ແລະໄດ້ຊົງນຳລົມໃຕ້ດ້ວຍຣິດອຳນາດຂອງພຣະອົງ.[27]ພຣະອົງໄດ້ຊົງໂຜດເນື້ອໃຫ້ພວກ
ເຂົາຢ່າງຜົງຂີ້ດິນ, ຄືບັນດານົກຢ່າງຫລວງຫລາຍເຫມືອນຢ່າງຊາຍໃນທະເລ.[28]ພວກມັນໄດ້ຕົກລົງມາກາງຄ້າຍຂອງພວກເຂົາ, ແລະຮອບໆເຕັນ
ຂອງພວກເຂົາ.
[29]ດັ່ງນັ້ນພວກເຂົາໄດ້ກິນແລະອີ່ມຫນຳສຳລານ. ພຣະອົງໄດ້ປຣະທານສິ່ງທີ່ພວກເຂົາຢາກກິນແກ່ພວກເຂົາ.[30]ແຕ່ພວກເຂົາຍັງຫິວກະຫາຍບໍ່
ອີ່ມພໍ; ໃນຂະນະທີ່ອາຫານຍັງຢູ່ໃນປາກຂອງພວກເຂົາ.
[31]ແລ້ວຄວາມໂກດຮ້າຍຂອງພຣະເຈົ້າ ກໍໄດ້ໂຈມຕີພວກເຂົາ ແລະໄດ້ສັງຫານຄົນແຂງແຮງທີ່ສຸດຂອງພວກເຂົເສຍ. ພຣະອົງໄດ້ຂ້າບັນດາຄົນ
ຫນຸ່ມແຫ່ງອິສະຣາເອນເສຍ.[32]ເຖິງປານນັ້ນ, ກໍຕາມ ພວກເຂົາກໍຍັງໄດ້ເຮັດບາບຕໍ່ໄປແລະບໍ່ໄດ້ເຊື່ອໃນການກະທຳອັນອັສະຈັນຕ່າງໆ ຂອງພຣະ
ອົງ.
[33]ເພາະສະນັ້ນພຣະເຈົ້າ, ຈຶ່ງຊົງເຮັດໃຫ້ວັນຂອງພວກເຂົາສັ້ນລົງ ປີເດືອນຂອງພວກເຂົາເຕັມໄປດ້ວຍຄວາມຫນ້າຢ້ານກົວ.[34]ເມື່ອໃດກໍຕາມທີ່ພ
ຣະອົງໄດ້ຊົງເຮັດໃຫ້ພວກເຂົາທຸກທໍຣະມານ, ພວກເຂົາກໍສະແຫວງຫາພຣະອົງ, ແລະພວກເຂົາກໍກັບມາແລະຊອກຫາພຣະເຈົ້າດ້ວຍໃຈຮ້ອນ
ຮົນ.
[35]ພວກເຂົາກໍຈະຣະນຶກວ່າພຣະເຈົ້າ, ໄດ້ຊົງເປັນພຣະສີລາຂອງພວກເຂົາແລະພຣະເຈົ້າ, ຜູ້ສູງສຸດນັ້ນໄດ້ຊົງເປັນພຣະຜູ້ໄຖ່ຂອງພວກເຂົາ.[36]ແຕ່
ພວກເຂົາກໍປະຈົບປະແຈງພຣະອົງດ້ວຍປາກຂອງພວກເຂົາແລະຕົວະດ້ວຍບັນດາຄຳເວົ້າບໍ່ຈິງຂອງພວກເຂົາ.[37]ເພາະໃຈຂອງພວກເຂົາບໍ່ຍຶດ
ຫມັ້ນຢູ່ໃນພຣະອົງ, ແລະພວກເຂົາບໍ່ຊື່ສັດຕໍ່ພັນທະສັນຍາຂອງພຣະອົງ.
[38]ເຖິງປານນັ້ນກໍຕາມ, ພຣະອົງຍັງຊົງເມດຕາ, ໄດ້ຊົງອະພັຍຄວາມຜິດບາບຂອງພວກເຂົາແລະບໍ່ໄດ້ຊົງທຳລາຍພວກເຂົາ. ແທ້ຈິງແລ້ວພຣະອົງ
ໄດ້ຊົງຍັບຢັ້ງຄວາມໂກດຮ້າຍຂອງພຣະອົງ ຢູ່ຫລາຍເທື່ອແລະບໍ່ໄດ້ຊົງກວນຄວາມໂກດຮ້າຍທັງຫມົດຂອງພຣະອົງຂຶ້ນມາ.
[39]ພຣະອົງນຶກໄດ້ວ່າພວກເຂົາຖືກສ້າງຈາກເນື້ອຫນັງ, ເປັນລົມທີ່ຜ່ານໄປແລ້ວບໍ່ໄດ້ກັບມາອີກ.[40]ພວກເຂົາໄດ້ກະບົດຕໍ່ພຣະອົງໃນຖິ່ນແຫ້ງແລ້ງກັນ
ດານ ແລະໄດ້ເຮັດໃຫ້ພຣະອົງເສຍໃຈໃນທີ່ແຫ້ງແລ້ງຫລາຍເທື່ອ![41]ພວກເຂົາຍັງໄດ້ທ້າທ້າຍພຣະເຈົ້າຫລາຍເທື່ອທີ່ໄດ້ເຮັດໃຫ້ອົງບໍຣິສຸດ
ຂອງຊາດອິສະຣາເອນເສົ້າໃຈ.
[42]ພວກເຂົາບໍ່ໄດ້ຣະນຶກຣິດອຳນາດຂອງພຣະອົງ, ເຖິງການທີ່ພຣະອົງໄດ້ຊົງຊ່ວຍກູ້ພວກເຂົາຈາກສັດຕຣູ[43]ເມື່ອພຣະອົງໄດ້ຊົງເຮັດຫມາຍສຳຄັນ
ທີ່ຫນ້າຢ້ານກົວຂອງພຣະອົງໃນເອຢິບແລະການອັສະຈັນທັງຫລາຍຂອງພຣະອົງໃນທີ່ດິນຂອງໂຊອານ.


generated on Tue Jun 17 19:01:42 2025

[44]ພຣະອົງໄດ້ຊົງປ່ຽນແມ່ນ້ຳຂອງເອຢິບໃຫ້ເປັນເລືອດເພື່ອພວກເຂົາບໍ່ສາມາດດື່ມຈາກລຳນ້ຳທັງຫລາຍຂອງພວກເຂົາໄດ້.[45]ພຣະອົງໄດ້ຊົງສົ່ງຝູງ
ຮີ້ນທີ່ໄດ້ມາກັດກິນພວກເຂົາ ຝູງກົບໄດ້ຂຶ້ນມາທຳລາຍແຜ່ນດິນຂອງພວກເຂົາ.[46]ພຣະອົງໄດ້ສົ່ງຝູງຕັກແຕນມາທຳລາຍພືດຜົນຂອງພວກເຂົາແກ່
ຕັກແຕນອ່ອນແລະຕັກແຕນວັຍບິນ.
[47]ພຣະອົງໄດ້ຊົງທຳລາຍບັນດາຕົ້ນອະງຸ່ນຂອງພວກເຂົາດ້ວຍຫມາກເຫັບແລະບັນດາຕົ້ນເດື່ອຂອງພວກເຂົາດ້ວຍນ້ຳກ້າມ.[48]ພຣະອົງໄດ້ຊົງ
ໃຫ້ຫມາກເຫັບລົງເທິງຝູງງົວຂອງພວກເຂົາແລະໄດ້ຊົງໂຍນສາຍຟ້າໃສ່ຝູງສັດຂອງພວກເຂົາ.[49]ຄວາມໂກດຮ້າຍອັນຮ້ອນແຮງຂອງພຣະອົງໄດ້
ຟາດໃສ່ພວກເຂົາ. ພຣະອົງໄດ້ສົ່ງທັງຄວາມໂກດແຄ້ນຮຸນແຮງ, ຄວາມໂກດຮ້າຍ, ແລະຄວາມທຸກລຳບາກມາເປັນດັ່ງບັນດາທູດສະຫວັນຜູ້ນຳ
ຄວາມຕາຍມາ.
[50]ພຣະອົງໄດ້ຊົງຍົກທາງສຳລັບຄວາມໂກດຮ້າຍຂອງພຣະອົງ; ພຣະອົງບໍ່ໄດ້ຊົງລະເວັ້ນພວກເຂົາຈາກຄວາມຕາຍແຕ່ໄດ້ຊົງມອບພວກເຂົາໃຫ້ແກ່
ໂຣກລະບາດ.[51]ພຣະອົງໄດ້ຊົງປຣະຫານລູກຫົວປີທັງຫມົດໃນເອຢິບ, ຄືຜົນແຮກແຫ່ງກຳລັງຂອງພວກເຂົາໃນບັນດາເຕັນຂອງຮາມ.
[52]ແລ້ວພຣະອົງໄດ້ຊົງນຳປະຊາກອນຂອງພຣະອົງ ອອກມາດັ່ງນຳແກະແລະໄດ້ຊົງພາພວກເຂົາຜ່ານຖິ່ນແຫ້ງແລ້ງກັນດານຄືພາຝູງແບ້ ແກະ.[53]ພ
ຣະອົງໄດ້ຊົງນຳພວກເຂົາໄປຢ່າງປອດພັຍແລະບໍ່ຢ້ານກົວ, ແຕ່ທະເລໄດ້ຖ້ວມສັດຕຣູຂອງພວກເຂົາ.
[54]ແລ້ວພຣະອົງໄດ້ຊົງພາພວກເຂົາມາຍັງເຂດແດນແຫ່ງແຜ່ນດິນບໍຣິສຸດຂອງພຣະອົງ, ຍັງພູເຂົານີ້ຊຶ່ງພຣະຫັດຂວາຂອງພຣະອົງໄດ້ຊົງສ້າງຂຶ້ນ.
[55]ພຣະອົງໄດ້ຊົງໄລ່ປະຊາຊາດຕ່າງໆ ອອກໄປຕໍ່ຫນ້າພວກເຂົາແລະໄດ້ຊົງແບ່ງທີ່ດິນໃຫ້ເປັນມໍຣະດົກຂອງພວກເຂົາ. ພຣະອົງໄດ້ຊົງຕັ້ງເຜົ່າທັງ
ຫລາຍຂອງອິສະຣາເອນຕາມເຕັນຂອງພວກເຂົາ.
[56]ແຕ່ເຂົາທັງຫລາຍກໍຍັງໄດ້ທ້າທາຍແລະກະບົດຕໍ່ພຣະເຈົ້າ ອົງຊົງຣິທານຸພາບສູງສຸດແລະບໍ່ໄດ້ຮັກສາບັນດາຂໍ້ຄຳສັ່ງທີ່ເຂັ້ມງວດຂອງພຣະອົງ.
[57]ພວກເຂົາບໍ່ໄດ້ຊື່ສັດແລະກະບົດເຫມືອນຢ່າງບັນພະບຸຣຸດຂອງພວກເຂົາ; ພວກເຂົາຕ່າງໄວ້ໃຈບໍ່ໄດ້ຄືຫນ້າທະນູບ້ຽວ.
[58]ເພາະພວກເຂົາໄດ້ເຮັດໃຫ້ພຣະອົງໂກດຮ້າຍດ້ວຍເລື່ອງສະຖານສູງຂອງເຂົາແລະໄດ້ຍຸແຍ່ພຣະອົງໃຫ້ໂກດຮ້າຍດ້ວຍຄວາມຫວງແຫນດ້ວຍ
ເລື່ອງບັນດາຮູບເຄົາຣົບຂອງພວກເຂົາ.[59]ເມື່ອພຣະເຈົ້າ, ໄດ້ຊົງຮັບຟັງເລື່ອງນີ້ແລ້ວ ພຣະອົງໄດ້ຊົງກິ້ວກາດຫລາຍແລະຊົງປະຕິເສດອິສະຣາເອນ
ຢ່າງຫມົດສິ້ນ.
[60]ພຣະອົງໄດ້ຊົງປະຖິ້ມສະຖານນະມັສະການແຫ່ງເມືອງຊີໂລ, ຄືທີ່ ພຣະອົງເຄີຍຢູ່ທ່າມກາງປະຊາຊົນ.[61]ພຣະອົງໄດ້ຊົງປ່ອຍໃຫ້ຣິທານຸພາບຂອງ
ພຣະອົງຖືກຈັບເປັນສະເລີຍແລະຊົງປຣະທານສະຫງ່າຣາສີຂອງພຣະອົງໃຫ້ແກ່ມືຂອງສັດຕຣູ.
[62]ພຣະອົງໄດ້ຊົງມອບປະຊາກອນຂອງພຣະອົງໃຫ້ແກ່ດາບ, ແລະພຣະອົງໄດ້ຊົງກິ້ວກາດຕໍ່ມໍຣະດົກຂອງພຣະອົງ.[63]ໄຟໄດ້ເຜົາຜານບັນດາຄົນ
ຫນຸ່ມໆຂອງພວກເຂົາ, ແລະພວກສາວໆ ຂອງພວກເຂົາຈຶ່ງບໍ່ມີເພງແຕ່ງງານ.
[64]ບັນດາປະໂລຫິດຂອງພວກເຂົາໄດ້ລົ້ມລົງດ້ວຍດາບ, ແລະບັນດາຍິງຫມ້າຍຂອງພວກເຂົາບໍ່ອາດຮ້ອງໃຫ້ໄວ້ທຸກ.[65]ແລ້ວອົງພຣະຜູ້ເປັນເຈົ້າໄດ້
ຊົງຕື່ນຄືຢ່າງຕື່ນນອນ, ດັ່ງຢ່າງນັກຮົບໂຫ່ຮ້ອງເພາະຣິດເຫລົ້າອະງຸ່ນ.[66]ພຣະອົງໄດ້ຊົງໄລ່ພວກສັດຕຣູຂອງພຣະອົງໃຫ້ກັບໄປ; ພຣະອົງໄດ້ຊົງໃຫ້
ພວກເຂົາອັບອາຍເປັນນິດ.
[67]ພຣະອົງໄດ້ຊົງປະຕິເສດເຕັນຂອງໂຢເຊັບ, ແລະພຣະອົງບໍ່ໄດ້ຊົງເລືອກເຜົ່າເອຟຣາອິມ.[68]ພຣະອົງໄດ້ຊົງເລືອກເຜົ່າຢູດາແລະພູເຂົາຊີໂອນຊຶ່ງພ
ຣະອົງຊົງຮັກ.[69]ພຣະອົງໄດ້ຊົງສ້າງສະຖານນະມັສະການຂອງພຣະອົງຄືຢ່າງຟ້າສະຫວັນ, ຄືຢ່າງແຜ່ນດິນໂລກຊຶ່ງພຣະອົງຊົງສະຖາປະນາໄວ້
ເປັນນິດ.
[70]ພຣະອົງໄດ້ຊົງເລືອກດາວິດ, ຜູ້ຮັບໃຊ້ຂອງພຣະອົງ, ແລະໄດ້ຊົງພາທ່ານມາຈາກຄອກແກະ.[71]ພຣະອົງໄດ້ຊົງພາທ່ານມາຈາກການດູແລແມ່
ແກະທີ່ມີລູກອ່ອນ, ແລະພຣະອົງໄດ້ຊົງພາທ່ານໃຫ້ເປັນຜູ້ລ້ຽງດູແກະຂອງຢາໂຄບ, ຄືປະຊາກອນຂອງພຣະອົງ ແລະຂອງອິສະຣາເອນ, ຊຶ່ງເປັນ
ມໍຣະດົກຂອງພຣະອົງ.[72]ດາວິດໄດ້ລ້ຽງດູພວກເຂົາດັ່ງລ້ຽງແກະດ້ວຍຄວາມຊື່ສັດສຸຈະຣິດແຫ່ງຈິດໃຈຂອງທ່ານ, ແລະທ່ານໄດ້ນຳພວກເຂົາດ້ວຍ
ພິກໄຫວອັນສະຫລາດຂອງທ່ານ.


generated on Tue Jun 17 19:01:42 2025

79 ບົດເພງສັນຣະເສີນຂອງອາສາບ.[1]ຂ້າແດ່ພຣະເຈົ້າ, ບັນດາຄົນຕ່າງຊາດໄດ້ລ່ວງລ້ຳມໍຣະດົກຂອງພຣະອົງ; ພວກເຂົາໄດ້ເຮັດໃຫ້ພຣະວິ
ຫານບໍຣິສຸດຂອງພຣະອົງເປັນມົນທິນ; ພວກເຂົາໄດ້ເຮັດໃຫ້ນະຄອນເຢຣູຊາເລັມຖືກທຳລາຍ.[2]ພວກເຂົາໄດ້ຍົກສົບບັນດາຜູ້ຮັບໃຊ້ຂອງພ
ຣະອົງໃຫ້ເປັນອາຫານແກ່ພວກນົກໃນທ້ອງຟ້າ, ໃຫ້ຮ່າງກາຍຂອງບັນດາຜູ້ຈົງຮັກພັກດີຂອງພຣະອົງແກ່ພວກສັດປ່າແຫ່ງແຜ່ນດິນໂລກ.
[3]ພວກເຂົາໄດ້ຫລັ່ງເລືອດຂອງພວກເຂົາອອກ ເຫມືອນນ້ຳຮອບໆນະຄອນເຢຣູຊາເລັມ, ແລະບໍ່ມີໃຜໄດ້ຝັງພວກເຂົາເລີຍ.

[4]ພວກຂ້ານ້ອຍທັງຫລາຍໄດ້ກາຍເປັນທີ່ຫມິ່ນປະຫມາດສຳລັບເພື່ອນບ້ານ, ເປັນທີ່ຖືກຫົວຂວັນແລະຫຍໍ້ຫຍັນແກ່ບັນດາຄົນທີ່ຢູ່ອ້ອມຂ້າງຂ້າ
ນ້ອຍທັງຫລາຍ.[5]ຂ້າແດ່ພຣະຢາເວ, ອີກດົນປານໃດ? ພຣະອົງຈະໂກດຮ້າຍໄປຕະຫລອດບໍ່? ຄວາມໂກດຮ້າຍເພາະຄວາມຫວງແຫນຂອງພຣະ
ອົງຈະໄຫມ້ດັ່ງໄຟໄປອີກດົນເທົ່າໃດ?
[6]ຂໍຊົງເທຄວາມໂກດແຄ້ນລົງເຫນືອບັນດາປະຊາກອນທີ່ບໍ່ຮູ້ຈັກພຣະອົງ ແລະເຫນືອຣາຊອານາຈັກທັງຫລາຍທີ່ບໍ່ຮ້ອງອອກພຣະນາມຊື່ຂອງພຣະ
ອົງ.[7]ເພາະເຂົາໄດ້ກືນກິນຢາໂຄບແລະໄດ້ທຳລາຍຫມູ່ບ້ານທັງຫລາຍຂອງເຂົາ.
[8]ຂໍຢ່າຊົງຖືຄວາມຊົ່ວຂອງບັນພະບຸຣຸດທັງຫລາຍມາຕໍ່ສູ້ຂ້ານ້ອຍທັງຫລາຍເລີຍ; ຂໍການກະທຳແຫ່ງຄວາມເມດຕາຂອງພຣະອົງມາຍັງຂ້ານ້ອຍ
ທັງຫລາຍ, ເພາະຂ້ານ້ອຍທັງຫລາຍຕົກຕ່ຳຫລາຍ.[9]ຂ້າແດ່ພຣະເຈົ້າ, ແຫ່ງຄວາມລອດຂອງຂ້ານ້ອຍທັງຫລາຍ, ຂໍຊົງຊ່ວຍຂ້ານ້ອຍທັງຫລາຍ
ເພື່ອເຫັນແກ່ພຣະສີຣິແຫ່ງພຣະນາມຊື່ຂອງພຣະອົງຂໍຊົງຊ່ວຍຂ້ານ້ອຍທັງຫລາຍ; ໃຫ້ລອດແລະຊົງອະພັຍການບາບຂອງຂ້ານ້ອຍທັງຫລາຍ
ເພື່ອເຫັນແກ່ພຣະນາມຊື່ຂອງພຣະອົງ.
[10]ເປັນຫຍັງບັນດາປະຊາຊາດຈຶ່ງຖາມຂ້ານ້ອຍວ່າ "ພຣະເຈົ້າຂອງພວກເຂົາຢູ່ທີ່ໃດ?" ຂໍໃຫ້ໂລຫິດຂອງບັນດາຜູ້ຮັບໃຊ້ຂອງພຣະອົງທີ່ຫລັ່ງອອກ
ໄດ້ຮັບການແກ້ແຄ້ນໃຫ້ຕົກໄປເທິງບັນດາປະຊາຊາດຕໍ່ຫນ້າຕໍ່ຕາຂອງຂ້ານ້ອຍທັງຫລາຍ[11]ຂໍໃຫ້ບັນດາສຽງຄວນຄາງຂອງນັກໂທດມາຢູ່ຕໍ່ຫນ້າພ
ຣະອົງ ຂໍຊົງຮັກສາລູກຫລານຂອງຜູ້ທີ່ຕາຍໄປແລ້ວໃຫ້ມີຊີວິດຢູ່ດ້ວຍຄວາມຍິ່ງໃຫຍ່ແຫ່ງຣິທານຸພາບຂອງພຣະອົງ.
[12]ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຊົງຕອບໂຕ້ໃຫ້ຕົກໄປເທິງຕັກຂອງຄົນປະເທດເພື່ອນບ້ານຂອງຂ້ານ້ອຍທັງຫລາຍເຈັດຄັ້ງ ໃຫ້ຫລາຍເທົ່າກັບການດູ
ຫມິ່ນທີ່ພວກເຂົາໄດ້ດູຫມິ່ນພຣະອົງ[13]ດັ່ງນັ້ນຂ້ານ້ອຍທັງຫລາຍຜູ້ເປັນປະຊາກອນຂອງພຣະອົງແລະແກະແຫ່ງທົ່ງຫຍ້າຂອງພຣະອົງຈະຂອບພ
ຣະຄຸນພຣະອົງເປັນນິດ ຂ້ານ້ອຍທັງຫລາຍຈະກ່າວບັນດາຄຳສັນຣະເສີນຂອງພຣະອົງແກ່ທຸກຊົ່ວອາຍຸ.

 generated on Tue Jun 17 19:01:42 2025

80 ສຳລັບຄະນະນັກດົນຕຣີ, ສົ່ງເຖິງໂຊຊານິມໃນແບບຂອງອີດັດ. ບົດເພງສັນຣະເສີນຂອງອາສາບ.[1]ຂ້າແດ່ພຣະຜູ້ຊົງລ້ຽງດູອິສະຣາເອນ
ດັ່ງລ້ຽງແກະ, ຂໍຊົງສົນໃຈຟັງ, ຄືພຣະອົງຜູ້ຊົງນຳໂຢເຊັບຢ່າງນຳຝູງ ແບ້ ແກະ ພຣະຜູ້ປຣະທັບເຫນືອເຫລົ່າເຄຣຸບ, ຂໍຊົງສົ່ງແສງມາ
ເຫນືອຂ້ານ້ອຍທັງຫລາຍ![2]ຜູ້ປາກົດພຣະອົງເອງຕໍ່ຫນ້າເອຟຣາອິມ, ແລະເບັນຢາມິນ; ແລະມານາເຊ, ຂໍຊົງປຸກຣິທານຸພາບຂອງພຣະອົງຂຶ້ນ ຂໍ
ສະເດັດມາແລະຊ່ວຍຂ້ານ້ອຍທັງຫລາຍໃຫ້ພົ້ນ.[3]ຂ້າແດ່ພຣະເຈົ້າ; ຂໍຊົງຮື້ຟື້ນຂ້ານ້ອຍທັງຫລາຍ, ຂໍໃຫ້ຫນ້າຂອງພຣະອົງສົ່ງແສງມາເຫນືອຂ້າ
ນ້ອຍທັງຫລາຍ ແລະຂ້ານ້ອຍທັງຫລາຍຈະພົ້ນ.

[4]ຂ້າແດ່ພຣະຢາເວພຣະເຈົ້າຈອມໂຍທາ, ພຣະອົງຈະຮ້າຍຕໍ່ປະຊາກອນຂອງພຣະອົງເມື່ອພວກເຂົາອະທິຖານອີກດົນປານໃດ?[5]ພຣະອົງໄດ້ຊົງ
ລ້ຽງພວກເຂົາດ້ວຍອາຫານແຫ່ງນ້ຳຕາ ແລະຊົງປຣະທານນ້ຳຕາໃຫ້ພວກເຂົາດື່ມຢ່າງຫລວງຫລາຍ.[6]ພຣະອົງຊົງເຮັດບາງສິ່ງແກ່ຂ້ານ້ອຍທັງ
ຫລາຍເພື່ອໃຫ້ຫມູ່ເພື່ອນບ້ານຂອງຂ້ານ້ອຍທັງຫລາຍເອົາມາຖຽງກັນ, ແລະບັນດາສັດຕຣູຂອງຂ້ານ້ອຍທັງຫລາຍພາກັນຫົວຂວັນກັນໃນເລື່ອງ
ຂອງຂ້ານ້ອຍທັງຫລາຍ.
[7]ຂ້າແດ່ພຣະເຈົ້າອົງຣິທານຸພາບ, ຂໍຊົງຮື້ຟື້ນຂ້ານ້ອຍທັງຫລາຍ; ຂໍພຣະພັກຂອງພຣະອົງສົ່ງແສງມາເຫນືອຂ້ານ້ອຍທັງຫລາຍ, ແລະຂ້ານ້ອຍທັງ
ຫລາຍຈະພົ້ນ.[8]ພຣະອົງໄດ້ຊົງນຳເຄືອອະງຸ່ນອອກຈາກເອຢິບ; ພຣະອົງໄດ້ຊົງຂັບໄລ່ບັນດາປະຊາຊາດອອກໄປແລະໄດ້ຊົງປູກເຄືອອະງຸ່ນໄວ້.
[9]ພຣະອົງໄດ້ຊົງຕຣຽມແຜ່ນດິນໃຫ້ໂລ່ງໄວ້ສຳຫລັບມັນ; ມັນກໍໄດ້ຢັ່ງຮາກເລິກແລະໄດ້ແຜ່ເຕັມແຜ່ນດິນ.[10]ບັນດາພູເຂົາໄດ້ຖືກປົກຄຸມດ້ວຍບັນດາ
ກິ່ງກ້ານຂອງມັນ,ຕົ້ນແຄນຂອງພຣະເຈົ້າໂດຍສາຂາຂອງມັນ.[11]ມັນໄດ້ແຜ່ກິ່ງຂອງມັນໄປໄກຮອດທະເລ ແລະບັນດາຫນໍ່ຂອງມັນໄປຮອດແມ່ນ້ຳ
ເອີຟຣັດ.
[12]ເຫດໃດພຣະອົງໄດ້ຊົງພັງກຳແພງຂອງມັນລົງ ເພື່ອໃຫ້ພວກເຂົາທັງຫມົດທີ່ຜ່ານທາງໄດ້ລັກເອົາຫມາກຂອງມັນ.[13]ບັນດາຫມູປ່າກໍອອກຈາກດົງ
ຢຽບຢ່ຳມັນ, ແລະບັນດາສັດປ່າໃນທົ່ງຫຍ້າກໍກິນມັນເປັນອາຫານ.
[14]ຂ້າແດ່ພຣະເຈົ້າ, ອົງຊົງຣິດອຳນາດຍິ່ງໃຫຍ່; ຂໍຊົງແນມລົງມາຈາກຟ້າສະຫວັນແລະຊົງສັງເກດແລະດູແລເຄືອອະງຸ່ນນີ້ດ້ວຍເຖີດ.[15]ນີ້ຄື
ເບ້ຍອະງຸ່ນທີ່ມືຂວາຂອງພຣະອົງໄດ້ຊົງປູກໄວ້, ຄືຫນໍ່ທີ່ພຣະອົງໄດ້ຊົງເຮັດໃຫ້ເຕີບໃຫຍ່.[16]ມັນໄດ້ຖືກເຜົາເສຍແລະໄດ້ຖືກຕັດລົງພວກມັນທຳລາຍ
ໄປເພາະຄວາມໂກດຮ້າຍຂອງພຣະອົງ.
[17]ຂໍພຣະຫັດຂອງພຣະອົງຢູ່ເຫນືອຄົນຢູ່ເບື້ອງຂວາມືຂອງພຣະອົງ, ເຫນືອບຸດມະນຸດທີ່ພຣະອົງໄດ້ຊົງເຮັດໃຫ້ແຂງແຮງເພື່ອພຣະອົງເອງ.[18]ແລ້ວ
ຂ້ານ້ອຍທັງຫລາຍຈະບໍ່ຫັນໄປຈາກພຣະອົງ; ຂໍຊົງຮື້ຟື້ນຂ້ານ້ອຍທັງຫລາຍ, ແລະຂ້ານ້ອຍທັງຫລາຍຈະຮ້ອງທູນອອກພຣະນາມຊື່ຂອງພຣະອົງ.
[19]ຂ້າແດ່ພຣະຢາເວພຣະເຈົ້າຈອມໂຍທາ, ຂໍຊົງຮື້ຟື້ນຂ້ານ້ອຍທັງຫລາຍ; ຂໍພຣະພັກຂອງພຣະອົງສົ່ງແສງມາເຫນືອຂ້ານ້ອຍທັງຫລາຍ, ແລະຂ້າ
ນ້ອຍທັງຫລາຍຈະໄດ້ພົ້ນ.

81 ສຳລັບຄະນະນັກດົນຕຣີ; ສົ່ງເຖິງແບບກິດຕິດ. ບົດເພງສັນຣະເສີນຂອງອາສາບ.[1]ຈົ່ງຮ້ອງເພງແດ່ພຣະເຈົ້າພຣະກຳລັງຂອງເຮົາດ້ວຍສຽງ
ດັງ; ຈົ່ງໂຫ່ຮ້ອງດ້ວຍຄວາມຍິນດີແດ່ພຣະເຈົ້າຂອງຢາໂຄບ.[2]ຈົ່ງຮ້ອງເພງແລະຕີບແສ່ງ, ຈົ່ງຮ້ອງເພງຊີນບານພ້ອມກັບພິນ.[3]ຈົ່ງເປົ່າເຂົາແກະ
ໂຕຜູ້ໃນວັນເດືອນອອກໃຫມ່, ແລະດວງຈັນເຕັມດວງ, ເມື່ອວັນເທສະການລ້ຽງຂອງເຮົາໄດ້ເລີ່ມຂຶ້ນ.

[4]ເພາະນີ້ຄືກົດບັນຍັດຂອງອິສະຣາເອນ, ເປັນຂໍ້ຄຳສັ່ງທີ່ພຣະເຈົ້າຂອງຢາໂຄບໄດ້ຊົງປຣະທານໃຫ້.[5]ພຣະອົງໄດ້ຊົງຕັ້ງໃຫ້ເປັນກົດບັນຍັດໃນໂຢ
ເຊັບ ເມື່ອພະອົງໄດ້ສະເດັດອອກໄປໂຈມຕີແຜ່ນດິນເອຢິບ, ຊຶ່ງຂ້ານ້ອຍໄດ້ຍິນສຽງເວົ້າທີ່ຂ້ານ້ອຍບໍ່ຮູ້ຈັກ.
[6]"ເຮົາໄດ້ປົດພາຣະຈາກບ່າຂອງເຂົາ; ມືຂອງເຂົາໄດ້ພົ້ນຈາກການຖືກະຕ່າ.[7]ເຈົ້າໄດ້ຮ້ອງບອກໃນຄວາມທຸກໃຈຂອງເຈົ້າ, ແລະເຮົາໄດ້ຊ່ວຍເຈົ້າ;
ເຮົາໄດ້ຕອບເຈົ້າຈາກເມກຄະນອງທີ່ມືດທຶບ. ເຮົາໄດ້ທົດສອບເຈົ້າທີ່ນ້ຳແຫ່ງເມຣີບາ. ເສ ລາ
[8]ຈົ່ງຟັງ, ປະຊາກອນຂອງເຮົາເອີຍ, ເພາະເຮົາຕັກເຕືອນເຈົ້າ, ອິສະຣາເອນເອີຍ ຖ້າພຽງແຕ່ເຈົ້າຈະຟັງເຮົາ![9]ຕ້ອງບໍ່ມີພະເຈົ້າຕ່າງດ້າວໃດທ່າມ
ກາງພວກເຈົ້າເລີຍ; ເຈົ້າຕ້ອງບໍ່ນະມັສະການພະເຈົ້າຕ່າງດ້າວໃດໆ.[10]ເຮົາຄືຢາເວພຣະເຈົ້າຂອງເຈົ້າ, ຜູ້ໄດ້ພາເຈົ້າອອກມາຈາກແຜ່ນດິນເອຢິບ
ຈົ່ງອ້າປາກຂອງເຈົ້າໃຫ້ກວ້າງ. ແລະເຮົາຈະປ້ອນໃຫ້ອີ່ມ.
[11]ແຕ່ປະຊາກອນຂອງເຮົາບໍ່ໄດ້ຟັງບັນດາຖ້ອຍຄຳຂອງເຮົາ; ອິສະຣາເອນບໍ່ໄດ້ເຊື່ອຟັງເຮົາ.[12]ດັ່ງນັ້ນເຮົາຈຶ່ງໄດ້ປ່ອຍພວກເຂົາໄປຕາມທາງທີ່ດື້ດ້ານ
ຂອງພວກເຂົາເອງ ເພື່ອທີ່ພວກເຂົາຈະໄດ້ເຮັດຕາມທີ່ພວກເຂົາເຫັນວ່າຖືກຕ້ອງ.
[13]ໂອ, ປະຊາກອນເຮົາຄວນຈະຟັງເຮົາ; ໂອ, ປະຊາກອນຂອງເຮົາຄວນຈະຍ່າງໃນບັນດາທາງຂອງເຮົາ.[14]ແລ້ວເຮົາກໍຈະປາບສັດຕຣູຂອງພວກ
ເຂົາໃນທັນໃດ ແລະຈະຫັນມືຂອງເຮົາຕໍ່ສູ້ບັນດາຜູ້ຂົ່ມເຫັງພວກເຂົາ.
[15]ຂໍໃຫ້ບັນດາຜູ້ທີ່ກຽດຊັງພຣະຢາເວກົ້ມຕົວລົງດ້ວຍຄວາມຢ້ານຕໍ່ຫນ້າພຣະອົງ! ຂໍໃຫ້ພວກເຂົາໄດ້ອັບອາຍເປັນນິດ.[16]ເຮົາຈະລ້ຽງອິສະຣາເອນ
ດ້ວຍເຂົ້າສາລີຢ່າງດີ; ເຮົາຈະເຮັດໃຫ້ເຈົ້າອີ່ມໃຈດ້ວຍນ້ຳເຜິ້ງທີ່ອອກມາຈາກຫີນ."


generated on Tue Jun 17 19:01:42 2025

82 [1]ບົດເພງສັນລະເສີນຂອງອາສາບ. ພຣະເຈົ້າ, ຊົງປະທັບໃນທີ່ຊຸມນຸມຂອງພຣະເຈົ້າ; ໃນທ່າມກາງບັນດາພະເຈົ້າທັງຫລາຍ ພຣະອົງຊົງຕັດ
ສິນ.[2]ເຈົ້າທັງຫລາຍຈະຕັດສິນຢ່າງຍຸຕິທັມແລະເຊົາເຂົ້າຂ້າງຄົນຊົ່ວອີກດົນປານໃດ? ເສລາ

[3]ຈົ່ງປົກປ້ອງຄົນຍາກຈົນແລະເດັກກຳພ້າ; ຈົ່ງປົກປ້ອງສິດຂອງຜູ້ທຸກຍາກແລະຜູ້ຂັດສົນ.[4]ຈົ່ງຊ່ວຍຄົນຍາກຈົນແລະຄົນຂັດສົນໃຫ້ພົ້ນພັຍ; ຈົ່ງເອົາ
ພວກເຂົາອອກຈາກເງື້ອມມືຂອງຄົນຊົ່ວ.
[5]ພວກເຂົາບໍ່ຮູ້ແລະບໍ່ເຂົ້າໃຈ; ພວກເຂົາເລາະໄປໃນຄວາມມືດ; ບັນດາຮາກຖານທັງຫມົດຂອງແຜ່ນດິນໂລກກໍຫວັ່ນໄຫວ.
[6]ເຮົາໄດ້ກ່າວວ່າ, "ເຈົ້າທັງຫລາຍເປັນພະເຈົ້າທັງຫລາຍ, ເປັນບັນດາລູກຂອງອົງຜູ້ສູງສຸດ.[7]ເຖິງປານນັ້ນກໍຕາມ ພວກເຈົ້າກໍຈະຕາຍຢ່າງມະນຸດ
ແລະລົ້ມລົງດັ່ງໃນບັນດາເຈົ້ານາຍທັງຫລາຍ."
[8]ຂ້າແດ່ພຣະເຈົ້າ, ຂໍຊົງລຸກຂຶ້ນຕັດສິນແຜ່ນດິນໂລກ, ເພາະບັນດາປະຊາຊາດທັງຫມົດເປັນມໍຣະດົກຂອງພຣະອົງ.


generated on Tue Jun 17 19:01:42 2025

83 1ບົດເພງ. ບົດເພງສັນຣະເສີນຂອງອາສາບ.2ຂ້າແດ່ພຣະເຈົ້າ, ຂໍຢ່າຊົງນິດ່ງຢູ່ ຂ້າແດ່ພຣະເຈົ້າ, ຂໍຢ່າຊົງເສີຍຕໍ່ຂ້ານ້ອຍທັງຫລາຍແລະ
ນິດ່ງຢູ່. ເບິ່ງເຖີດ, ບັນດາສັດຕຣູຂອງພຣະອົງກຳລັງສ້າງຄວາມວຸ້ນວາຍ, ແລະບັນດາຜູ້ທີ່ຊັງພຣະອົງໄດ້ຍົກຫົວຂອງພວກເຂົາຂຶ້ນ.

3ເຂົາທັງຫລາຍວາງແຜນຕໍ່ສູ້ປະຊາກອນຂອງພຣະອົງ ແລະຮ່ວມກັນວາງແຜນຕໍ່ສູ້ຜູ້ທີ່ພຣະອົງໄດ້ຊົງປົກປ້ອງໄວ້.4ເຂົາທັງຫລາຍໄດ້ເວົ້າວ່າ, "ມາ
ເຖີດ, ໃຫ້ເຮົາທຳລາຍພວກເຂົາໃນຖານະທີ່ເປັນຊົນຊາດຫນຶ່ງ ແລ້ວຊື່ຂອງອິສະຣາເອນຈະບໍ່ເປັນທີ່ຈົດຈຳອີກຕໍ່ໄປ."5ພວກເຂົາໄດ້ສຸມຫົວກັນວາງ
ແຜນດ້ວຍວິທີດຽວກັນ; ພວກເຂົາໄດ້ສ້າງພັນທະມິດຂຶ້ນຕໍ່ສູ້ ພຣະອົງ.
6ນີ້ລວມໄປເຖິງບັນດາເຕັນຂອງເອໂດມແລະຄົນອິຊະມາເອນ, ແລະຄົນໂມອາບແລະຄົນຮັກກິດ, ເປັນຜູ້ທີ່ໄດ້ວາງແຜນຮ່ວມກັນ7ເກບານ, ອຳ
ໂມນ, ອາມາເຫລັກ; ແລະລວມໄປເຖິງຟີລິສະຕິນກັບຊາວເມືອງຕີເຣ.
8ອັດຊີເຣຍກໍສົມທົບພວກເຂົາດ້ວຍ; ພວກເຂົາກຳລັງຊ່ວຍເຫລືອບັນດາຂອງລູກຫລານຂອງໂລດ. ເສ ລາ
9ຂໍພຣະອົງຊົງເຮັດແກ່ພວກເຂົາເຫມືອນຢ່າງທີ່ພຣະອົງໄດ້ຊົງເຮັດແກ່ຄົນມີດີອານ, ຢ່າງທີ່ໄດ້ຊົງເຮັດແກ່ສີເສຣາແລະຢາບິນທີ່ແມ່ນ້ຳກີໂຊນ.
10ພວກເຂົາໄດ້ພິນາດໄປທີ່ເມືອງເອນໂດເຣ ແລະກາຍເປັນຄືປຸ໋ຍຄອກສຳລັບແຜ່ນດິນໂລກ.
11ຂໍຊົງເຮັດໃຫ້ພວກຜູ້ນຳຂອງພວກເຂົາເປັນດັ່ງໂອເຣັບແລະເຊເອັບ, ແລະບັນດາເຈົ້ານາຍທັງຫມົດຂອງພວກເຂົາເປັນດັ່ງເຊບາແລະຊັນມຸນນາ.
12ພວກເຂົາໄດ້ກ່າວວ່າ, "ໃຫ້ເຮົາເອົາບັນດາທົ່ງຫຍ້າຂອງພຣະເຈົ້າມາເປັນຂອງພວກເຮົາເຖີດ."
13ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍ ຂໍຊົງເຮັດໃຫ້ພວກເຂົາເຫມືອນຂີ້ຝຸ່ນດິນທີ່ວົນວຽນ, ເຫມືອນແກບຕໍ່ຫນ້າລົມ,14ເຫມືອນຢ່າງໄຟທີ່ເຜົາຜານປ່າ
ໄມ້, ແລະຢ່າງແປວໄຟທີ່ໄຫມ້ເນີນພູເຂົາ.15ຂໍຊົງໄລ່ຕາມພວກເຂົາໄປດ້ວຍພາຍຸຮຸນແຮງຂອງພຣະອົງ, ແລະຊົງເຮັດໃຫ້ພວກເຂົາຢ້ານກົວດ້ວຍ
ພາຍຸຂອງພຣະອົງ.
16ຂໍຊົງໃຫ້ບັນດາໃບຫນ້າຂອງພວກເຂົາເຕັມໄປດ້ວຍຄວາມອາຍ ເພື່ອພວກເຂົາຈະໄດ້ສະແຫວງຫາພຣະນາມຊື່ຂອງພຣະອົງ, ພຣະຢາເວ.17ຂໍ
ໃຫ້ພວກເຂົາອັບອາຍແລະຢ້ານກົວຢູ່ເປັນນິດ; ໃຫ້ພວກເຂົາຈິບຫາຍໄປໃນຄວາມອັບປະຍົດ.
18ແລ້ວພວກເຂົາຈະຮູ້ວ່າພຣະອົງຜູ້ດຽວ, ພຣະຢາເວ, ຊົງເປັນຜູ້ສູງສຸດເຫນືອແຜ່ນດິນໂລກທັງຫມົດ.


generated on Tue Jun 17 19:01:42 2025

84 ສຳລັບຄະນະນັກດົນຕີ; ສົ່ງເຖິງແບບກິດຕີ. ບົດເພງສັນລະເສີນຂອງລູກຊາຍຂອງໂກຣາ. [1]ຂ້າແດ່ພຣະຢາເວອົງຈອມໂຍທາ, ທີ່ປະທັບຂອງ
ພຣະອົງຊ່າງງົດງາມແທ້ໆ! [2]ຂ້ານ້ອຍປາຖະໜາຢາກຢູ່ໃນວິຫານຂອງພຣະຢາເວ, ຄວາມປາຖະໜາຂອງຂ້ານ້ອຍທີ່ມີຕໍ່ພຣະວິຫານໄດ້
ເຮັດໃຫ້ຂ້ານ້ອຍອ່ອນແຮງ. ທັງຈິດໃຈແລະກາຍທັງໝົດຂອງຂ້ານ້ອຍກຳລັງຮ້ອງຫາພຣະເຈົ້າຜູ້ຊົງມີຊີວິດຢູ່.

[3]ແມ່ນແຕ່ນົກກະຈອກກໍຫາບ້ານໄດ້ແລ້ວແລະນົກນາງແອ່ນຫາຮັງສຳລັບຕົວມັນໄດ້, ໃນທີ່ທີ່ມັນຈະວາງໄຂ່ອອກລູກຂອງມັນໃກ້ກັບບັນດາແທ່ນບູ
ຊາຂອງພຣະອົງ, ຂ້າແດ່ພຣະຢາເວອົງຈອມໂຍທາ ຜູ້ຊົງເປັນພຣະຣາຊາແລະພຣະເຈົ້າຂອງຂ້ານ້ອຍ. [4]ຜູ້ທີ່ອາສັຍຢູ່ໃນພຣະວິຫານຂອງພຣະອົງ
ກໍເປັນສຸກ; ພວກເຂົາສັນຣະເສີນພຣະອົງຢູ່ເລື້ອຍໄປ. ເສ ລາ
[5]ຄົນທີ່ກຳລັງຂອງເຂົາຢູ່ໃນພຣະອົງກໍເປັນສຸກ, ໃນຜູ້ທີ່ໃຈຂອງເຂົາເປັນບັນດາທາງຫລວງຂຶ້ນໄປຍັງຊີໂອນ. [6]ຂະນະທີ່ຜ່ານໄປຕາມຮ່ອມພູ
ແຫ້ງແລ້ງແຫ່ງບາກາ, ພວກເຂົາກໍພົບບັນດານ້ຳພຸທີ່ຈະດື່ມ. ຝົນຕົ້ນຣະດູປົກຄຸມທີ່ນັ້ນດ້ວຍພຣະພອນທັງຫລາຍ.
[7]ພວກເຂົາໄປດ້ວຍກຳລັງທີ່ເພີ່ມຂຶ້ນເລື້ອຍໆ; ພວກເຂົາທຸກຄົນເຂົ້າເຝົ້າຕໍ່ໜ້າພຣະເຈົ້າໃນຊີໂອນ. [8]ຂ້າແດ່ພຣະຢາເວພຣະເຈົ້າຈອມໂຍທາ, ຂໍຊົງ
ຟັງຄຳອະທິຖານຂອງຂ້ານ້ອຍ; ຂ້າແດ່ພຣະເຈົ້າຂອງຢາໂຄບ. ຂໍຊົງຟັງສິ່ງທີ່ຂ້ານ້ອຍກຳລັງຮ້ອງຂໍ! ເສ ລາ [9]ຂ້າແດ່ພຣະເຈົ້າ, ຂໍແນມເບິ່ງໂລ້ຂອງ
ຂ້ານ້ອຍທັງຫລາຍ; ຂໍຊົງສຳແດງຄວາມຫວ່ງໃຍຕໍ່ຜູ້ທີ່ພຣະອົງໄດ້ຊົງເຈີມໄວ້. [10]ເພາະວັນດຽວໃນບໍຣິເວນພຣະວິຫານຂອງພຣະອົງກໍດີກວ່າ
ພັນວັນໃນທີ່ອື່ນ. ຂ້ານ້ອຍຂໍເປັນຄົນເຝົ້າປະຕູໃນພຣະວິຫານຂອງພຣະເຈົ້າ, ຂອງຂ້ານ້ອຍດີກວ່າຢູ່ໃນບັນດາເຕັນຂອງຄົນຊົ່ວ.
[11]ເພາະພຣະຢາເວພຣະເຈົ້າຊົງເປັນດວງອາທິດແລະປັນໂລ້ຂອງເຮົາ; ພຣະຢາເວຈະຊົງປຣະທານພຣະຄຸນແລະສັກສີ; ພຣະອົງບໍ່ໄດ້ຊົງ
ໜ່ຽວລັ້ງສິ່ງທີ່ດີອັນໃດຈາກບັນດາຜູ້ທີ່ດຳເນີນໃນຄວາມຊື່ສັດສຸຈະລິດ. [12]ຂ້າແດ່ພຣະຢາເວອົງຈອມໂຍທາ, ຄົນທີ່ວາງໃຈໃນພຣະອົງກໍເປັນສຸກ.


generated on Tue Jun 17 19:01:42 2025

85 ສຳລັບຄະນະນັກດົນຕຣີ. ບົດເພງສັນຣະເສີນລູກຊາຍຂອງໂກຣາ. 1 ຂ້າແດ່ພຣະຢາເວ, ພຣະອົງໄດ້ຊົງສຳແດງຄວາມເມດຕາແກ່ແຜ່ນດິນ
ຂອງພຣະອົງ; ພຣະອົງໄດ້ຊົງຮື້ຟື້ນຄວາມເປັນຢູ່ທີ່ດີຂອງຢາໂຄບ. 2 ພຣະອົງໄດ້ຊົງຍົກໂທດຄວາມບາບຂອງປະຊາກອນຂອງພຣະອົງ; ພຣະ
ອົງຊົງໄດ້ປົກປິດຄວາມບາບທັງຫມົດຂອງພວກເຂົາ. ເສ ລາ

3 ພຣະອົງໄດ້ຊົງກຳຈັດຄວາມໂຫດຮ້າຍທັງຫມົດຂອງພຣະອົງ; ພຣະອົງໄດ້ຊົງຫັນຈາກຄວາມໃຈຮ້າຍອັນຮ້ອນແຮງຂອງພຣະອົງ. 4 ຂ້າແດ່ພຣະ
ເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍທັງຫລາຍ, ຂໍຊົງຊ່ວຍຂ້ານ້ອຍທັງຫລາຍໃຫ້ກັບຄືນສູ່ສະພາບດີ,
ຂໍຊົງລະງັບຄວາມຮ້າຍທີ່ມີຕໍ່ຂ້ານ້ອຍທັງຫລາຍ. 5 ພຣະອົງຈະໃຈຮ້າຍຂ້ານ້ອຍທັງຫລາຍເປັນນິດບໍ? ພຣະອົງຈະຊົງໃຫ້ຄວາມໂກດຮ້າຍຂອງພ
ຣະອົງດຳຣົງຢູ່ໄປຈົນເຖິງຊົ່ວອາຍຸໃນອານາຄົດບໍ?
6 ພຣະອົງຈະບໍ່ຊົງຮື້ຟື້ນພວກຂ້ານ້ອຍຂຶ້ນອີກບໍ? ເພື່ອປະຊາກອນຂອງພຣະອົງຈະຊື່ນຊົມຍິນດີໃນພຣະອົງ. 7 ຂ້າແດ່ພຣະຢາເວ, ຂໍຊົງສຳແດງ
ຄວາມຊື່ສັດ, ແຫ່ງຄຳສັນຍາຂອງພຣະອົງແກ່ຂ້ານ້ອຍທັງຫລາຍ.
8 ຂ້ານ້ອຍຈະຟັງສິ່ງທີ່ພຣະຢາເວພຣະເຈົ້າກ່າວ, ເພາະພຣະອົງຈະຊົງສ້າງສັນຕິພາບກັບປະຊາກອນຂອງພຣະອົງ. ຄືແກ່ບັນດາຜູ້ທີ່ຕິດຕາມພຣະ
ອົງຢ່າງຊື່ສັດ ແຕ່ສະນັ້ນກໍຕາມ ພວກເຂົາຕ້ອງບໍ່ຫັນກັບໄປສູ່ບັນດາທາງແຫ່ງຄວາມໂງ່ອີກ. 9 ທີ່ຄວາມລອດຂອງພຣະອົງຢູ່ໃກ້ຄົນທີ່ຢຳເກງພຣະ
ອົງ; ເພື່ອສະງ່າຣາສີຈະດຳຣົງຢູ່ໃນແຜ່ນດິນຂອງຂ້ານ້ອຍທັງຫລາຍ.
10 ຄວາມຊື່ສັດແຫ່ງຄຳສັນຍາແລະຄວາມແທ້ຈິງໄດ້ມາພົບກັນ; ຄວາມຊອບທັມແລະສັນຕິພາບໄດ້ຈູບກັນແລະກັນ. 11 ຄວາມແທ້ຈິງກໍງອກຂຶ້ນມາ
ຈາກແຜ່ນດິນ, ແລະຄວາມຊອບທັມກໍແນມລົງມາຈາກທ້ອງຟ້າ.
12 ແມ່ນແລ້ວ, ພຣະຢາເວຈະປຣະທານບັນດາພຣະພອນທີ່ດີ, ແລະແຜ່ນດິນຂອງຂ້ານ້ອຍທັງຫລາຍຈະຜະລິດຜົນຂອງມັນອອກມາ. 13 ຄວາມຊອບ
ທັມຈະນຳຫນ້າພຣະອົງແລະຕຣຽມຫົນທາງໄວ້ສຳຫລັບກ້າວຍ່າງຂອງພຣະອົງ.


generated on Tue Jun 17 19:01:42 2025

86 ຄຳອະທິຖານຂອງດາວິດ.[1]ຂ້າແດ່ພຣະຢາເວ, ຂໍຊົງຮັບຟັງ, ແລະຂໍຊົງຕອບຂ້ານ້ອຍ, ເພາະຂ້ານ້ອຍຍາກຈົນແລະຖືກກົດຂີ່.[2]ຂໍຊົງຄຸ້ມຄອງ
ຂ້ານ້ອຍເພາະຂ້ານ້ອຍເປັນຜູ້ຈົງຮັກພັກດີ, ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍຂໍຊົງຊ່ວຍຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນຄືຜູ້ທີ່ວາງໃຈໃນພຣະ
ອົງ.

[3]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍຊົງເມດຕາຕໍ່ຂ້ານ້ອຍ, ເພາະຂ້ານ້ອຍຮ້ອງທູນຕໍ່ພຣະອົງວັນຍັງຄ່ຳ.[4]ຂໍຊົງໃຫ້ຜູ້ຮັບໃຊ້ຂອງພຣະອົງຍິນດີ, ຂ້າແດ່ພ
ຣະຜູ້ເປັນເຈົ້າ, ເພາະຂ້ານ້ອຍອະທິຖານຕໍ່ພຣະອົງ.
[5]ຂ້າແດ່ພຣະຜູ້ເປັນເຈົ້າ, ພຣະອົງຊົງປະເສີດ, ແລະຊົງພ້ອມທີ່ຍົກໂທດແລະໃຫ້ອະພັຍ, ແລະພຣະອົງໄດ້ຊົງສຳແດງພຣະເມດຕາອັນຍິ່ງໃຫຍ່ແກ່
ບັນດາຜູ້ທີ່ພາວັນນາອະທິຖານຕໍ່ພຣະອົງທັງຫມົດ.[6]ຂ້າແດ່ພຣະຢາເວ, ຂໍຊົງຟັງຄຳອະທິຖານຂອງຂ້ານ້ອຍ, ຂໍຊົງຟັງສຽງວິງວອນຂອງຂ້ານ້ອຍ.
[7]ຂ້ານ້ອຍຮ້ອງຫາພຣະອົງໃນວັນແຫ່ງຄວາມຍາກລຳບາກຂອງຂ້ານ້ອຍ, ເພາະພຣະອົງຈະຊົງຕອບຂ້ານ້ອຍ ຂ້າແດ່ພຣະຜູ້ເປັນເຈົ້າ.
[8]ໃນບັນດາພະເຈົ້າທັງຫລາຍ ບໍ່ມີຜູ້ໃດທຽບກັບພຣະອົງໄດ້ ບໍ່ມີການກະທຳໃດໆ, ທີ່ເປັນຄືບັນດາການກະທຳຂອງພຣະອົງ.[9]ຂ້າແດ່ອົງພຣະຜູ້ເປັນ
ເຈົ້າ, ບັນດາຊົນຊາດທັງຫມົດທີ່ພຣະອົງໄດ້ຊົງສ້າງຈະມາແລະກາບລົງຕໍ່ຫນ້າຂອງພຣະອົງ, ພວກເຂົາຈະເທີດທູນພຣະນາມຊື່ຂອງພຣະອົງ.
[10]ເພາະພຣະອົງຊົງຍິ່ງໃຫຍ່ແລະຊົງເຮັດການອັສະຈັນຕ່າງໆ; ພຣະອົງແຕ່ຜູ້ດຽວຊົງເປັນພຣະເຈົ້າ.[11]ຂ້າແດ່ພຣະຢາເວ, ຂໍຊົງສອນບັນດາສິ່ງທີ່
ຢາກໃຫ້ເຮັດຂອງພຣະອົງແກ່ຂ້ານ້ອຍ. ແລ້ວຂ້ານ້ອຍຈະດຳເນີນໃນຄວາມຈິງຂອງພຣະອົງ. ຂໍຊົງລວມໃຈຂອງຂ້ານ້ອຍເປັນໃຈດຽວເພື່ອເຄົາ
ຣົບຢຳເກງຕໍ່ພຣະອົງ.[12]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະເຈົ້າຂອງຂ້ານ້ອຍ, ຂ້າພຣະອົງຈະສັນຣະເສີນພຣະອົງດ້ວຍສຸດໃຈ; ຂ້ານ້ອຍຈະເທີດທູນ
ພຣະນາມຊື່ຂອງພຣະອົງເປັນນິດ.
[13]ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງທີ່ຊົງມີຕໍ່ຂ້ານ້ອຍນັ້ນໃຫຍ່ຫລາຍ; ພຣະອົງໄດ້ຊົງຊ່ວຍກູ້ຊີວິດຂອງຂ້ານ້ອຍຈາກທີ່ເລິກຂອງ
ແດນຄົນຕາຍ.[14]ຂ້າແດ່ພຣະເຈົ້າ, ຄົນຈອງຫອງໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ ກຸ່ມຄົນໂຫດຮ້າຍມຸ້ງເອົາຊີວິດຂ້ານ້ອຍ. ພວກເຂົາບໍ່ເຄົາຣົບຢຳເກງພຣະ
ອົງເລີຍ.
[15]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ແຕ່ພຣະອົງຊົງເປັນພຣະເຈົ້າ, ແຫ່ງພຣະເມດຕາແລະຊົງພຣະຄຸນ, ບໍ່ຮ້າຍງ່າຍ ແລະຊົງອຸດົມດ້ວຍຄວາມຊື່ສັດ
ແຫ່ງພັນທະສັນຍາແລະຄວາມສັດຈິງ.[16]ຂໍຊົງຫັນມາຫາຂ້ານ້ອຍແລະຊົງພຣະເມດຕາຂ້ານ້ອຍດ້ວຍເຖີດ; ຂໍຊົງປຣະທານພຣະກຳລັງຂອງພຣະ
ອົງແກ່ຜູ້ຮັບໃຊ້ຂອງພຣະອົງ; ແລະຂໍຊົງຊ່ວຍລູກຊາຍຂອງຍິງຄົນຮັບໃຊ້ຂອງພຣະອົງໃຫ້ພົ້ນ.[17]ຂໍຊົງສຳແດງຫມາຍສຳຄັນແຫ່ງຄວາມເມດຕາ
ແກ່ຂ້ານ້ອຍ. ເພື່ອຄົນທີ່ກຽດຊັງຂ້ານ້ອຍຈະເຫັນແລ້ວອັບອາຍເພາະພຣະອົງ, ຄືພຣະຢາເວ ໄດ້ຊົງຊ່ວຍເຫລືອຂ້ານ້ອຍແລະໄດ້ຊົງປອບໃຈຂ້າ
ນ້ອຍ.


generated on Tue Jun 17 19:01:42 2025

87 ບົດເພງສັນຣະເສີນຂອງໂກຣາ; ບົດເພງ.[1]ມີເມືອງທີ່ຕັ້ງໄວ້ເທິງພູເຂົາສັກສິດຊຶ່ງພຣະອົງໄດ້ຊົງວາງຮາກຖານໄວ້;[2]ພຣະຢາເວຊົງຮັກບັນດາປະ
ຕູຂອງຊີໂອນຫລາຍຍິ່ງກວ່າບັນດາເຕັນຂອງຢາໂຄບທັງຫມົດ.[3]ໂອ ເມືອງຂອງພຣະເຈົ້າເອີຍ, ບັນດາສິ່ງທີ່ມີສະຫງ່າຣາສີຕ່າງກ່າວເຖິງນາງ.
ເສລາ

[4]"ເຮົາໄດ້ເວົ້າເຖິງຣາຫັບແລະບາບີໂລນແກ່ບັນດາຜູ້ຕິດຕາມເຮົາ. ເບິ່ງເຖີດ, ມີຟີລິສະຕິນ, ແລະຕີເຣ, ພ້ອມກັບເອທີໂອເປຍ- ແລະຈະກ່າວວ່າ,
'ຜູ້ນີ້ໄດ້ເກີດທີ່ນັ້ນ."
[5]ສ່ວນພູເຂົາຊີໂອນກໍຈະກ່າວວ່າ, "ບັນດາຊົນຊາດທັງຫລາຍເປັນຂອງພູນີ້; ແລະອົງຜູ້ຊົງຣິທານຸພາບສູງສຸດຈະຊົງເຮັດໃຫ້ເຂັ້ມແຂງຂຶ້ນ."[6]ພຣະ
ຢາເວຊົງບັນທຶກໄວ້ໃນປື້ມທະບຽນແຫ່ງບັນດາປະຊາຊາດວ່າ, "ຜູ້ນີ້ໄດ້ເກີດທີ່ນັ້ນ."ເສລາ
[7]ດັ່ງນັ້ນບັນດານັກຮ້ອງແລະນັກເຕັ້ນກ່າວພ້ອມກັນວ່າ, "ນ້ຳພຸທັງຫມົດຂອງເຮົາຢູ່ໃນພູເຂົາຊີໂອນ."


generated on Tue Jun 17 19:01:42 2025

88 ບົດເພງ, ບົດເພງສັນຣະເສີນລູກຊາຍຂອງໂກຣາ; ສຳລັບຄະນະນັກດົນຕຣີ; ສົ່ງເຖິງແບບມາຫາລາດ ເລນອນ. ແບບຂອງເຮມານ.[1]ຂ້າແດ່ພ
ຣະຢາເວ, ພຣະເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍ, ຂ້ານ້ອຍຮ້ອງຫາພຣະອົງຕໍ່ຫນ້າພຣະອົງທັງກາງເວັນແລະກາງຄືນ.[2]ຂໍຊົງຟັງຄຳອະທິ
ຖານຂອງຂ້ານ້ອຍ; ຂໍຊົງສົນໃຈຕໍ່ສຽງຮ້ອງຂໍຂອງຂ້ານ້ອຍ.

[3]ເພາະຂ້ານ້ອຍໄດ້ເຕັມໄປດ້ວຍບັນດາຄວາມທຸກຍາກລຳບາກ, ແລະຊີວິດຂອງຂ້ານ້ອຍໄດ້ລົງໄປເຖິງແດນຄົນຕາຍ.[4]ບັນດາຜູ້ຄົນຕ່າງປະຕິບັດຕໍ່
ຂ້ານ້ອຍຄືຜູ້ທີ່ລົງໄປຍັງຫລຸມແຫ່ງຄວາມຕາຍ; ຂ້ານ້ອຍເປັນຊາຍຄົນຫນຶ່ງທີ່ບໍ່ມີກຳລັງ.
[5]ຂ້ານ້ອຍໄດ້ຖືກຖິ້ມໄວ້ທ່າມກາງຄົນຕາຍ; ຂ້ານ້ອຍເປັນຄືຄົນຕາຍທີ່ນອນຢູ່ໃນຂຸມຝັງສົບ, ເປັນຜູ້ທີ່ພຣະອົງບໍ່ສົນໃຈອີກຕໍ່ໄປເພາະພວກເຂົາຖືກ
ຕັດອອກຈາກຣິທານຸພາບຂອງພຣະອົງ.[6]ພຣະອົງຊົງວາງຂ້ານ້ອຍໄວ້ໃນຂຸມທີ່ເລິກສຸດ, ຂອງຂຸມແຫ່ງຄວາມຕາຍ ໃນບັນດາແດນທີ່ມືດແລະຫນາ.
[7]ຄວາມໂກດຮ້າຍຂອງພຣະອົງທັບເຕັງຢ່າງຫນັກເທິງຂ້ານ້ອຍ, ແລະບັນດາຄື້ນແຫ່ງຄວາມໂກດຮ້າຍຂອງພຣະອົງທັງຫມົດໄດ້ຊັດຖ້ວມຂ້ານ້ອຍ.
ເສ ລາ
[8]ເປັນເພາະພຣະອົງ, ບັນດາຫມູ່ເພື່ອນຂອງຂ້ານ້ອຍຈຶ່ງໄດ້ເຫີນຫ່າງຈາກຂ້ານ້ອຍ. ພຣະອົງໄດ້ຊົງເຮັດໃຫ້ຂ້ານ້ອຍເປັນພາບທີ່ຫນ້າຕົກໃຈຕໍ່ພວກ
ເຂົາ. ຂ້ານ້ອຍຖືກຂັງໄວ້ແລະຂ້ານ້ອຍຫນີອອກໄປບໍ່ໄດ້.
[9]ດວງຕາຂອງຂ້ານ້ອຍອິດເມື່ອຍໄປຈາກຄວາມທຸກຍາກລຳບາກ; ຂ້າແດ່ພຣະຢາເວ; ຂ້ານ້ອຍຮ້ອງຫາພຣະອົງວັນຮອດຄ່ຳ ຂ້ານ້ອຍຍື່ນມືຂອງ
ຂ້ານ້ອຍອອກຕໍ່ພຣະອົງ.[10]ພຣະອົງຈະຊົງເຮັດການອັສະຈັນເພື່ອຄົນຕາຍບໍ່? ບັນດາຜູ້ທີ່ຕາຍໄປແລ້ວຈະລຸກຂຶ້ນແລະສັນຣະເສີນພຣະອົງບໍ່?
ເສລາ
[11]ຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງຈະຖືກປະກາດໃນຂຸມຝັງສົບ, ຫລືປະກາດຄວາມສະເຫມີຕົ້ນສະເຫມີປາຍຂອງພຣະອົງໃນແດນ
ຄົນຕາຍບໍ່?[12]ການກະທຳອັນອັສະຈັນຂອງພຣະອົງຈະເປັນຮູ້ຈັກກັນໃນຄວາມມືດ, ຫລືຄວາມຊອບທັມຂອງພຣະອົງເປັນທີ່ຮູ້ຈັກກັນໃນແຜ່ນດິນ
ແຫ່ງຄວາມຫລົງລືມບໍ່?
[13]ຂ້າແດ່ພຣະຢາເວ, ແຕ່ຂ້ານ້ອຍຮ້ອງຫາພຣະອົງໃນຍາມເຊົ້າ; ຄຳອະທິຖານຂອງຂ້ານ້ອຍມາຢູ່ຊ້ອງຫນ້າພຣະອົງ.[14]ຂ້າແດ່ພຣະຢາເວ, ພຣະ
ອົງຊົງປະຕິເສດຂ້ານ້ອຍ? ພຣະອົງຊົງເຊື່ອງຫນ້າຂອງພຣະອົງໄປຈາກຂ້ານ້ອຍ?
[15]ຂ້ານ້ອຍເຄີຍທຸກຍາກແລະເກືອບຕາຍມາແລ້ວຕັ້ງແຕ່ຂ້ານ້ອຍຍັງຫນຸ່ມນັ້ນ. ຂ້ານ້ອຍໄດ້ທົນທຸກເນື່ອງຈາກຄວາມຢ້ານກົວຂອງພຣະອົງ; ຂ້າ
ນ້ອຍທໍ້ແທ້.[16]ບັນດາການກະທຳແຫ່ງຄວາມໂກດຮ້າຍຂອງພຣະອົງໄດ້ຜ່ານໄປເທິງຂ້ານ້ອຍ, ບັນດາການກະທຳທີ່ຫນ້າຢ້ານຈາກພຣະອົງໄດ້ທຳ
ລາຍລ້າງຂ້ານ້ອຍ.
[17]ພວກມັນໄດ້ອ້ອມຂ້ານ້ອຍເຫມືອນຢ່າງນ້ຳຖ້ວມຕະຫລອດວັນ; ພວກມັນໂອບອ້ອມຂ້ານ້ອຍໄວ້ຮອບດ້ານ.[18]ພຣະອົງໄດ້ຊົງເອົາບັນດາເພື່ອນທີ່ໃກ້
ຊິດອອກໄປຈາກຂ້ານ້ອຍ. ມີພຽງຄວາມມືດເປັນເພື່ອນໃກ້ຊິດຂອງຂ້ານ້ອຍ.


generated on Tue Jun 17 19:01:42 2025

89 ຄຳແນະນຳຂອງອີທານ. 1ຂ້ານ້ອຍຈະຮ້ອງເພງເຖິງບັນດາການກະທຳແຫ່ງຄວາມຊື່ສັດແຫ່ງຄຳສັນຍາຂອງພຣະຢາເວເປັນນິດ. ຂ້ານ້ອຍຈະ
ປະກາດເຖິງຄວາມສັດຈິງຂອງພຣະອົງແກ່ບັນດາຊົ່ວອາຍຸຄົນໃນອານາຄົດ. 2ເພາະຂ້ານ້ອຍໄດ້ກ່າວວ່າ, "ຄວາມຊື່ສັດແຫ່ງພັນທະສັນຍາ
ໄດ້ຖືກສະຖາປະນາໄວ້ເປັນນິຣັນ; ພຣະອົງໄດ້ຊົງສະຖາປະນາຄວາມແທ້ຈິງຂອງພຣະອົງໄວ້ໃນຟ້າສະຫວັນ."

3"ເຮົາໄດ້ເຮັດພັນທະສັນຍາໄວ້ກັບຜູ້ທີ່ຖືກເລືອກໄວ້ຂອງເຮົາ, ເຮົາໄດ້ໃຫ້ຄຳສັນຍາແກ່ດາວິດຜູ້ຮັບໃຊ້ຂອງເຮົາ. 4ເຮົາຈະສະຖາປະນາເຊື້ອສາຍ
ຂອງເຈົ້າໄວ້ເປັນນິດ, ແລະເຮົາຈະສະຫງວນບັນລັງຂອງເຈົ້າໄວ້ທຸກຊົ່ວຊາດ."ເສ ລາ
5ຂ້າແດ່ພຣະຢາເວ, ຟ້າສະຫວັນຍົກຍ້ອງສັນຣະເສີນບັນດາການອັສະຈັນຂອງພຣະອົງ ຄວາມແທ້ຈິງຂອງພຣະອົງເປັນທີ່ສັນຣະເສີນໃນທີ່ປະຊຸມ
ຂອງບັນດາຜູ້ບໍຣິສຸດ. 6ເພາະມີຜູ້ໃດເທິງທ້ອງຟ້າທຽບກັບພຣະຢາເວໄດ້? ເພາະຜູ້ໃດໃນທ່າມກາງບັນດາລູກຂອງພະເຈົ້າທັງຫລາຍເປັນດັ່ງພຣະ
ຢາເວໄດ້?.
7ພຣະອົງຊົງເປັນພຣະເຈົ້າ, ຜູ້ໄດ້ຮັບການຍົກຍ້ອງຢ່າງຍິ່ງໃຫຍ່ ແລະໜ້າຢ້ານກົວໃນທ່າມກາງຄົນທັງປວງທີ່ຢູ່ອ້ອມຮອບພຣະອົງ. 8ຂ້າແດ່ພຣະ
ຢາເວ ພຣະເຈົ້າ, ຈອມໂຍທາ ຜູ້ໃດຈະແຂງແກ່ນດັ່ງພຣະອົງຜູ້, ເປັນພຣະຢາເວໄດ້? ຄວາມແທ້ຈິງຂອງພຣະອົງອ້ອມຮອບພຣະອົງ.
9ພຣະອົງຊົງປົກຄອງທະເລທີ່ປັ່ນປ່ວນ; ເມື່ອບັນດາຄື້ນຊັດແຮງ, ພຣະອົງຊົງເຮັດໃຫ້ມັນສະຫງົບ. 10ພຣະອົງໄດ້ຊົງຢຽບ ມັງກອນຄືຣາ
ຮາບເຫມືອນຜູ້ຖືກຂ້າ. ພຣະອົງໄດ້ຊົງກະຈາຍພວກສັດຕຣູຂອງພຣະອົງດ້ວຍແຂນທີ່ແຂງແກ່ນຂອງພຣະອົງ.
11ຟ້າສະຫວັນເປັນຂອງພຣະອົງ, ແລະແຜ່ນດິນໂລກດ້ວຍ. ພຣະອົງໄດ້ຊົງສ້າງໂລກແລະທຸກສິ່ງທີ່ຢູ່ໃນນັ້ນ. 12ພຣະອົງໄດ້ຊົງສ້າງທິດເຫນືອແລະ
ທິດໃຕ້. ພູເຂົາຕາໂບແລະພູເຂົາເຮີໂມນຊື່ນຊົມຍິນດີໃນພຣະນາມຊື່ຂອງພຣະອົງ.
13ພຣະອົງຊົງມີແຂນຊົງຣິດອຳນາດແລະມືອັນແຂງແກ່ນ, ແລະມືຂວາຂອງພຣະອົງກໍສູງສົ່ງ. 14ຄວາມຊອບທັມແລະຄວາມຍຸຕິທັມເປັນຮາກຖານ
ແຫ່ງບັນລັງຂອງພຣະອົງ. ຄວາມຊື່ສັດແຫ່ງພັນທະສັນຍາແລະຄວາມຈິງກໍກ້າວເດີນໄປນຳຫນ້າພຣະອົງ.
15ຂ້າແດ່ພຣະຢາເວ! ປະຊາກອນຜູ້ທີ່ນະມັສະການພຣະອົງກໍເປັນສຸກ, ພວກເຂົາເດີນໃນຄວາມສະຫວ່າງແຫ່ງພຣະພັກຂອງພຣະອົງ. 16ພວກເຂົາ
ຊົມຊື່ນຍິນດີໃນພຣະນາມຊື່ຂອງພຣະອົງຕະຫລອດວັນຍັງຄ່ຳ, ແລະພວກເຂົາຍົກຍ້ອງເຊີດຊູພຣະອົງໃນຄວາມຊອບທັມຂອງພຣະອົງ.
17ເພາະພຣະອົງຊົງເປັນກຳລັງອັນສູງສົ່ງຂອງເຂົາທັງຫລາຍ, ແລະຂ້ານ້ອຍທັງຫລາຍມີຊັຍຊະນະໂດຍຄວາມເມດຕາຂອງພຣະອົງ. 18ເພາະໂລ້
ຂອງເຮົາເປັນຂອງພຣະຢາເວ; ບັນດາກະສັດຂອງເຮົາເປັນຂອງອົງບໍຣິສຸດແຫ່ງອິສະຣາເອນ.
19ເມື່ອດົນມາແລ້ວ ພຣະອົງໄດ້ກ່າວໃນນິມິດແກ່ບັນດາຜູ້ທີ່ຊື່ສັດຂອງພຣະອົງ; ພຣະອົງໄດ້ກ່າວວ່າ, "ເຮົາໄດ້ຕັ້ງມົງກຸດເທິງຜູ້ແຂງແກ່ນຄົນຫນຶ່ງ;
ເຮົາໄດ້ຍົກຄົນຫນຶ່ງທີ່ຖືກເລືອກຈາກທ່າມກາງຫມູ່ປະຊາຊົນຂຶ້ນ. 20ເຮົາໄດ້ເລືອກດາວິດຜູ້ຮັບໃຊ້ຂອງເຮົາ; ເຮົາໄດ້ເຈີມເຂົາໄວ້ດ້ວຍນ້ຳມັນບໍຣິສຸດ
ຂອງເຮົາ. 21ມືຂອງເຮົາຈະປະຄັບປະຄອງເຂົາ; ແຂນຂອງເຮົາຈະເສີມກຳລັງເຂົາ. 22ບໍ່ມີສັດຕຣູໃດຈະຕົວະເຂົາໄດ້; ບໍ່ມີລູກຂອງຄວາມຊົ່ວຈະຂົ່ມ
ເຫັງເຂົາໄດ້. 23ເຮົາຈະຢຽບຢ່ຳພວກສັດຕຣູຂອງເຂົາຕໍ່ຫນ້າເຂົາ; ເຮົາຈະຂ້າບັນດາຜູ້ທີ່ກຽດຊັງເຂົາ.
24ຄວາມຈິງແລະຄວາມຊື່ສັດແຫ່ງພັນທະສັນຍາຂອງເຮົາຈະຢູ່ກັບເຂົາ; ເຂົາຈະເປັນຜູ້ມີຊັຍຊະນະໂດຍນາມຊື່ຂອງເຮົາ. 25ເຮົາຈະເອົາມືຂອງເຂົາ
ວາງເທິງທະເລແລະມືຂວາຂອງເຂົາເທິງແມ່ນ້ຳທັງຫລາຍ. 26ເຂົາຈະຮ້ອງຕໍ່ເຮົາວ່າ, 'ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ, ພຣະອົງຊົງເປັນພໍ່ຂອງຂ້າ
ນ້ອຍ, ແລະຊົງເປັນພຣະສີລາແຫ່ງຄວາມພົ້ນຂອງຂ້ານ້ອຍ.'
27ແລະເຮົາຈະໃຫ້ເຂົາເປັນຄືລູກຫົວປີຂອງເຮົາ, ເປັນຜູ້ໄດ້ຮັບການຍົກສູງສຸດແຫ່ງບັນດາກະສັດຂອງແຜ່ນດິນໂລກ. 28ເຮົາຈະຂະຫຍາຍຄວາມຊື່
ສັດແຫ່ງພັນທະສັນຍາຂອງເຮົາກັບເຂົາເປັນນິດ; ແລະພັນທະສັນຍາຂອງເຮົາກັບເຂົາຈະຫມັ້ນຄົງຢູ່. 29ເຮົາຈະເຮັດໃຫ້ບັນດາລູກຫລານຂອງເຂົາ
ມີຢູ່ຕະຫລອດໄປເປັນນິດ ແລະບັນລັງຂອງເຂົາດຳຣົງຢູ່ດັ່ງເຊັ່ນທ້ອງຟ້າເບື້ອງເທິງ.
30ຖ້າລູກຫລານຂອງເຂົາຖິ້ມກົດບັນຍັດຂອງເຮົາແລະບໍ່ດຳເນີນຕາມບັນດາຂໍ້ຄຳສັ່ງຂອງເຮົານັ້ນ, 31ຖ້າພວກເຂົາຝ່າຝືນບັນດາກົດບັນຍັດຂອງເຮົາ
ແລະບໍ່ຮັກສາຂໍ້ຄຳສັ່ງຂອງເຮົາໄວ້, 32ແລ້ວເຮົາຈະລົງໂທດການບາບຂອງພວກເຂົາດ້ວຍໄມ້ແສ້ ແລະລົງໂທດຄວາມຜິດບາບຂອງພວກເຂົາດ້ວຍ
ການຂ້ຽນ.
33ແຕ່ເຮົາຈະບໍ່ຖອນຄວາມຮັກຫມັ້ນຄົງຂອງເຮົາໄປຈາກເຂົາ ຫລືບໍ່ຊື່ສັດຕໍ່ຄຳສັນຍາຂອງເຮົາ. 34ເຮົາຈະບໍ່ຝ່າຝືນພັນທະສັນຍາຂອງເຮົາຫລືປ່ຽນ
ແປງບັນດາຖ້ອຍຄຳແຫ່ງຮີມສົບປາກຂອງເຮົາ.
35ເຮົາໄດ້ສາບານໂດຍຄວາມບໍຣິສຸດຂອງເຮົາ-ພຽງຄັ້ງດຽວເປັນພໍ ເຮົາຈະບໍ່ຕົວະຕໍ່ດາວິດຈັກເທື່ອ. 36ບັນດາເຊື້ອສາຍຂອງເຂົາຈະດຳຣົງຢູ່ເປັນນິດ
ແລະບັນລັງຂອງເຂົາຈະຍືນນານດັ່ງເຊັ່ນດວງອາທິດຕໍ່ຫນ້າເຮົາ. 37ບັນລັງນັ້ນຈະຖືກສະຖາປະນາໄວ້ເປັນນິດດັ່ງເຊັ່ນດວງຈັນ, ຊຶ່ງເປັນພະຍານທີ່ຊື່
ສັດໃນທ້ອງຟ້າ."ເສລາ
38ແຕ່ພຣະອົງໄດ້ຊົງປະຕິເສດແລະຊົງປະຖິ້ມແລ້ວ; ພຣະອົງໄດ້ຊົງໂກດຮ້າຍຕໍ່ກະສັດທີ່ໄດ້ຮັບການເຈີມໄວ້ຂອງພຣະອົງ. 39ພຣະອົງໄດ້ຊົງຍົກເລີກ
ພັນທະສັນຍາທີ່ເຮັດໄວ້ກັບຜູ້ຮັບໃຊ້ຂອງພຣະອົງ. ພຣະອົງຊົງເຮັດໃຫ້ມົງກຸດຂອງກະສັດເປັນມົນທິນເທິງພື້ນດິນ. 40ພຣະອົງໄດ້ຊົງພັງກຳແພງທັງ
ຫມົດຂອງກະສັດລົງ. ພຣະອົງໄດ້ຊົງທຳລາຍທີ່ກຳບັງເຂັ້ມແຂງຂອງທ່ານລົງ.
41ຄົນທັງປວງທີ່ຜ່ານໄປກໍໄດ້ປຸ້ນທ່ານ. ທ່ານກາຍເປັນສິ່ງທີ່ຫນ້າລັງກຽດຕໍ່ບັນດາເພື່ອນບ້ານຂອງທ່ານ. 42ພຣະອົງໄດ້ຊົງຍົກມືຂວາພວກສັດຕຣູ
ຂອງທ່ານຂຶ້ນ; ພຣະອົງໄດ້ຊົງເຮັດໃຫ້ພວກສັດຕຣູທັງຫລາຍຂອງທ່ານຍິນດີ. 43ພຣະອົງຊົງຫັນຄົມດາບຂອງທ່ານໄປແລະບໍ່ຊົງໃຫ້ທ່ານຍືນຫມັ້ນ
ໃນສົງຄາມໄດ້.
44ພຣະອົງຊົງໃຫ້ຄວາມຮຸ່ງເຮືອງຂອງທ່ານສິ້ນສຸດລົງ; ພຣະອົງໄດ້ຊົງນຳບັນລັງຂອງທ່ານລົງສູ່ພື້ນດິນ. 45ພຣະອົງໄດ້ຊົງໃຫ້ວັນເວລາວັຍຫນຸ່ມຂອງ
ທ່ານສັ້ນລົງ. ພຣະອົງໄດ້ຊົງຄຸມທ່ານດ້ວຍຄວາມອາຍ. ເສລາ
46ຂ້າແດ່ພຣະຢາເວ, ອີກດົນປານໃດ? ພຣະອົງຈະລີ້ພຣະອົງເອງ, ເປັນນິດບໍ່? ຄວາມໂກດຮ້າຍຂອງພຣະອົງຈະໄຫມ້ເຫມືອນໄຟຢູ່ດົນປານໃດ?
47ໂອ, ຂໍຊົງຣະນຶກວ່າຊີວິດຂອງຂ້ານ້ອຍນັ້ນສັ້ນຊ່ຳໃດ, ແລະເພາະພຣະອົງໄດ້ຊົງສ້າງລູກຫລານຂອງມະນຸດທັງຫມົດມາບໍ່ມີປະໂຫຍດແທ້ໆ!
48ໃຜສາມາດມີຊີວິດຢູ່ໄດ້ໂດຍບໍ່ຕາຍ, ຫລືສາມາດຊ່ວຍກູ້ຊີວິດຂອງຕົນຈາກເງື້ອມມືແຫ່ງແດນຄົນຕາຍໄດ້? ເສລາ
49ຂ້າແດ່ພຣະຜູ້ເປັນເຈົ້າ, ບັນດາການກະທຳຂອງຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງຕັ້ງແຕ່ເກົ່າກ່ອນທີ່ພຣະອົງໄດ້ຊົງສັນຍາໄວ້ແກ່ດາ
ວິດດ້ວຍຄວາມສັດຈິງຂອງພຣະອົງນັ້ນຢູ່ທີ່ໃດ? 50ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍຊົງຣະນຶກເຖິງການຫມິ່ນປະຫມາດທີ່ຖືກບັນດາຜູ້ຮັບໃຊ້ຂອງພຣະ

 generated on Tue Jun 17 19:01:42 2025

ອົງ ແລະການທີ່ຂ້ານ້ອຍແບກຮັບຫມິ່ນປະຫມາດຫລວງຫລາຍຈາກຊົນຊາດທັງຫລາຍໄວ້ໃນໃຈຂອງຂ້ານ້ອຍ. [51]ຂ້າແດ່ພຣະຢາເວ, ບັນດາສັດ
ຕຣູຂອງພຣະອົງໄດ້ຫຍໍ້ຫຍັນພວກເຂົາ; ພວກເຂົາຫມິ່ນປະຫມາດ ຮອຍຕີນຂອງຜູ້ທີ່ພຣະອົງໄດ້ຊົງເຈີມໄວ້.
[52]ຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວເປັນນິດ. ອາແມນ ແລະອາແມນ. ຫນັງສືຫົວທີສີ່


generated on Tue Jun 17 19:01:42 2025

90 ຄຳອະທິຖານຂອງໂມເຊ ຄົນຂອງພຣະເຈົ້າ.1ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະອົງຊົງເປັນທີ່ລີ້ພັຍຂອງຂ້ານ້ອຍທັງຫລາຍທຸກຊົ່ວເຊື້ອຊາດ.
2ກ່ອນທີ່ພູເຂົາທັງຫລາຍໄດ້ຖືກສ້າງຂຶ້ນ, ຫລືກ່ອນທີ່ພຣະອົງໄດ້ຊົງສ້າງແຜ່ນດິນແລະໂລກ, ພຣະອົງຊົງເປັນພຣະເຈົ້າຕັ້ງແຕ່ນິຣັນການເຖິງ
ນິຣັນການ.

3ພຣະອົງຊົງໃຫ້ມະນຸດກັບເປັນຂີ້ຝຸ່ນດິນ, ແລະພຣະອົງກ່າວວ່າ, "ບັນດາເຊື້ອສາຍຂອງມະນຸດທັງຫລາຍເອີຍ, ຈົ່ງກັບມາເຖີດ."4ເພາະພັນປີໃນ
ສາຍຕາຂອງພຣະອົງເປັນເຫມືອນວານນີ້ຊຶ່ງຜ່ານໄປແລ້ວ, ແລະເປັນດັ່ງຍາມດຽວໃນເວລາກາງຄືນ.
5ພຣະອົງຊົງກວາດເຂົາທັງຫລາຍໄປຄືກວາດດ້ວຍນ້ຳຖ້ວມແລະພວກເຂົາກໍຫລັບໄຫລ; ໃນເວລາເຊົ້າພວກເຂົາເປັນຄືຫຍ້າທີ່ງອກຂຶ້ນ.6ໃນເວລາ
ເຊົ້າມັນກໍບານອອກແລະງອກຂຶ້ນ; ໃນເວລາແລງກໍຫ່ຽວລົງແລະແຫ້ງໄປ.
7ຂ້ານ້ອຍທັງຫລາຍຖືກຄວາມຮ້າຍຂອງພຣະອົງເຜົາຜານເສຍ, ແລະໃນຄວາມໂກດຮ້າຍຂອງພຣະອົງ ຂ້ານ້ອຍທັງຫລາຍກໍຢ້ານກົວ.8ພຣະອົງ
ຊົງຕັ້ງບັນດາຄວາມຊົ່ວຂອງຂ້ານ້ອຍທັງຫລາຍໄວ້ຕໍ່ຫນ້າພຣະອົງ, ຊົງຕັ້ງບັນດາຄວາມບາບທີ່ເຊື່ອງຊ້ອນຂອງຂ້ານ້ອຍທັງຫລາຍໄວ້ໃນຄວາມສະ
ຫວ່າງແຫ່ງພຣະພັກຂອງພຣະອົງ.
9ຊີວິດຂອງຂ້ານ້ອຍທັງຫລາຍຫມົດໄປພາຍໃຕ້ຄວາມໂກດຮ້າຍຂອງພຣະອົງ; ບັນດາປີຂອງພວກຂ້ານ້ອຍຜ່ານໄປຢ່າງໄວວາເຫມືອນຢ່າງສຽງ
ລົມຫາຍໃຈ.10ບັນດາປີຂອງພວກຂ້ານ້ອຍຄືເຈັດສິບປີ, ຫລືແປດສິບປີ ຖ້າພວກຂ້ານ້ອຍມີສຸກຂະພາບດີ; ແມ່ນແຕ່ວ່າບັນດາປີທີ່ດີທີ່ສຸດຂອງຂ້າ
ນ້ອຍທັງຫລາຍກໍຖືກຫມາຍໄວ້ດ້ວຍຄວາມຍາກລຳບາກແລະຄວາມເສົ້າໂສກ ເວລາປີເຫລົ່ານັ້ນກໍຜ່ານໄປຢ່າງໄວວາ, ແລະຂ້ານ້ອຍທັງຫລາຍກໍ
ຕາຍໄປ.
11ຜູ້ໃດຈະຮູ້ເຖິງພະລັງແຫ່ງຄວາມໃຈຮ້າຍຂອງພຣະອົງ, ແລະຄວາມໂກດຮ້າຍຂອງພຣະອົງ ທີ່ມີຂະຫນາດເທົ່າກັບຄວາມຢ້ານກົວພຣະອົງໄດ້?
12ດັ່ງນັ້ນຂໍຊົງສອນຂ້ານ້ອຍທັງຫລາຍໃຫ້ຕຶກຕອງເຖິງຊີວິດຂອງຂ້ານ້ອຍທັງຫລາຍເພື່ອທີ່ຂ້ານ້ອຍທັງຫລາຍຈະໄດ້ດຳເນີນຊີວິດຢ່າງມີປັນຍາ.13ຂໍ
ຊົງກັບມາ, ຂ້າແດ່ພຣະຢາເວ! ຍັງອີກດົນປານໃດ? ຂໍຊົງເມດຕາຜູ້ຮັບໃຊ້ຂອງພຣະອົງ.
14ຂໍຊົງໃຫ້ຂ້ານ້ອຍທັງຫລາຍອີ່ມເອີບໃນເວລາເຊົ້າດ້ວຍຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງ, ເພື່ອຂ້ານ້ອຍທັງຫລາຍຈະໄດ້ຊື່ນຊົມແລະ
ຍິນດີຕະຫລອດວັນເວລາຂອງພວກຂ້ານ້ອຍ.15ຂໍຊົງໃຫ້ຂ້ານ້ອຍທັງຫລາຍຍິນດີຕາມສັດສ່ວນເທົ່າກັບຈຳນວນວັນທັງຫລາຍທີ່ພຣະອົງໄດ້ຊົງໃຫ້
ພວກຂ້ານ້ອຍທຸກຍາກນັ້ນ ແລະຕາມບັນດາປີທີ່ພວກຂ້ານ້ອຍໄດ້ປະສົບຄວາມຍາກລຳບາກນັ້ນ.16ຂໍໃຫ້ບັນດາຜູ້ຮັບໃຊ້ຂອງພຣະອົງໄດ້ເຫັນການ
ກະທຳຂອງພຣະອົງ, ແລະໃຫ້ລູກຫລານຂອງພວກຂ້ານ້ອຍໄດ້ເຫັນຄວາມສະຫງ່າງາມຂອງພຣະອົງ.
17ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກຂ້ານ້ອຍຂໍຊົງໂຜດປຣະທານພຣະພອນແຫ່ງຄາມເມດຕາເປັນຂອງພວກຂ້ານ້ອຍ; ຂໍຊົງໃຫ້ການງານ
ຈາກມືຂອງພວກຂ້ານ້ອຍໄດ້ຈະເຣີນຮຸ່ງເຮືອງ; ຂໍຊົງເຮັດໃຫ້ການງານແຫ່ງມືຂອງຂ້ານ້ອຍທັງຫລາຍໄດ້ສຳເລັດຜົນ.

 generated on Tue Jun 17 19:01:42 2025

91 [1]ຜູ້ທີ່ອາສັຍຢູ່ໃນກຳບັງຂອງອົງຜູ້ສູງສຸດຈະຢູ່ໃນຮົ່ມເງົາຂອງຜູ້ຊົງຣິດອຳນາດ.[2]ຂ້ານ້ອຍຈະກ່າວເຖິງພຣະຢາເວວ່າ, "ພຣະອົງຊົງເປັນທີ່ລີ້
ພັຍຂອງຂ້ານ້ອຍແລະປ້ອມປ້ອງກັນຂອງຂ້ານ້ອຍ, ພຣະເຈົ້າຂອງຂ້ານ້ອຍ, ຜູ້ທີ່ຂ້ານ້ອຍໄວ້ວາງໃຈ."

[3]ເພາະພຣະອົງຈະຊົງຊ່ວຍກູ້ທ່ານໃຫ້ພົ້ນຈາກກັບດັກຂອງນາຍພານແລະພົ້ນຈາກໂຣກຣະບາດຮ້າຍແຮງນັ້ນ.[4]ພຣະອົງຈະຊົງປົກທ່ານໄວ້ດ້ວຍ
ປີກຂອງພຣະອົງ, ແລະທ່ານຈະພົບທີ່ລີ້ພັຍພາຍໃຕ້ປີກຂອງພຣະອົງ. ຄວາມແທ້ຈິງຂອງພຣະອົງເປັນໂລ້ແລະທີ່ຄຸ້ມພັຍ.
[5]ທ່ານຈະບໍ່ຢ້ານກົວຄວາມອັນຕະຣາຍໃນເວລາກາງຄືນ, ຫລືລູກທະນູທີ່ປິວໄປໃນເວລາກາງເວັນ,[6]ຫລືຢ້ານໂຣກຣະບາດທີ່ເລາະໄປທົ່ວໃນຄວາມ
ມືດ, ຫລືໂຣກພັຍຊຶ່ງມາເຖິງໃນທ່ຽງວັນ.[7]ພັນຄົນຈະລົ້ມຢູ່ຂ້າງໆ ທ່ານແລະຫມື່ນຄົນທີ່ຂວາມືຂອງທ່ານ ແຕ່ພັຍນັ້ນຈະບໍ່ມາເຖິງທ່ານ.
[8]ທ່ານຈະໄດ້ແຕ່ເຝົ້າເບິ່ງແລະເຫັນການລົງໂທດຄົນຊົ່ວເທົ່ານັ້ນ.[9]ເພາະພຣະຢາເວຊົງເປັນທີ່ລີ້ພັຍຂອງຂ້ານ້ອຍ! ຈົ່ງໃຫ້ອົງຜູ້ສູງສຸດເປັນທີ່ລີ້ພັຍ
ຂອງທ່ານດ້ວຍ.
[10]ບໍ່ມີຄວາມຊົ່ວຈະຕາມມາທັນທ່ານໄດ້; ບໍ່ມີໂຣກພັຍໄຂ້ເຈັບຈະມາໃກ້ທີ່ພັກຂອງທ່ານ.[11]ເພາະພຣະອົງຈະຊົງບັນຊາເຫລົ່າທູດສະຫວັນຂອງພຣະ
ອົງໃຫ້ປົກປ້ອງທ່ານ, ເພື່ອຄຸ້ມຄອງທ່ານໃນບັນດາທາງທັງຫມົດຂອງທ່ານ.
[12]ເຫລົ່າທູດສະຫວັນຈະຍົກທ່ານຂຶ້ນດ້ວຍມືຂອງພວກເຂົາເພື່ອຕີນຂອງທ່ານຈະບໍ່ຕຳຫີນ.[13]ທ່ານຈະເອົາຊະນະເຫລົ່າສິງແລະງູພິດໄວ້ໃຕ້ຕີນຂອງ
ທ່ານ; ທ່ານຈະຢຽບຢ່ຳເຫລົ່າສິງຫນຸ່ມແລະງູຮ້າຍ.
[14]ເພາະພຣະອົງໄດ້ກ່າວແກ່ຂ້ານ້ອຍວ່າ, ເຮົາຈະຊ່ວຍກູ້ເຂົາ. ເຮົາຈະປົກປ້ອງເພາະເຂົາຈຶ່ງຮັກພັກດີຕໍ່ເຮົາ.[15]ເມື່ອເຂົາຮ້ອງຫາເຮົາ, ເຮົາກໍຈະ
ຕອບເຂົາ. ເຮົາຈະຢູ່ກັບເຂົາໃນຍາມລຳບາກ; ເຮົາຈະໃຫ້ຊັຍຊະນະແກ່ເຂົາແລະໃຫ້ກຽຕເຂົາ.[16]ເຮົາຈະໃຫ້ເຂົາອີ່ມໃຈດ້ວຍຊີວິດທີ່ຍືນຍາວ
ແລະສຳແດງຄວາມພົ້ນຂອງເຮົາໃຫ້ເຂົາເຫັນ.


generated on Tue Jun 17 19:01:42 2025

92 ບົດເພງສັນຣະເສີນ, ບົດເພງສຳລັບວັນສະບາໂຕ.[1]ເປັນການດີທີ່ຈະຖວາຍຂອບພຣະຄຸນແດ່ພຣະຢາເວ ແລະຮ້ອງເພງສັນຣະເສີນແດ່ພຣະ
ນາມຊື່,ຂອງພຣະອົງຜູ້ສູງສຸດ.[2]ເພື່ອປະກາດຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງ ໃນເວລາເຊົ້າແລະຄວາມຈິງຂອງພຣະອົງທຸກຄືນ,
[3]ດ້ວຍພິນສິບສາຍແລະດ້ວຍທຳນອງຂອງພິນເຂົາຄູ່.

[4]ຂ້າແດ່ພຣະຢາເວ, ເພາະພຣະອົງ, ໄດ້ຊົງກະທຳໃຫ້ຂ້ານ້ອຍຍິນດີດ້ວຍບັນດາການກະທຳຂອງພຣະອົງ ຂ້ານ້ອຍຈະຮ້ອງເພງດ້ວຍຄວາມຊື່
ນບານເນື່ອງດ້ວຍການກະທຳແຫ່ງພຣະຫັດຂອງພຣະອົງ.[5]ຂ້າແດ່ພຣະຢາເວ! ບັນດາການກະທຳຂອງພຣະອົງໃຫຍ່ຫລວງຫລາຍ, ບັນດາ
ຄຳສັ່ງຂອງພຣະອົງກໍສຸດເລິກລັບ.
[6]ອັນນີ້ເປັນສິ່ງຄົນໂງ່ຈ້າບໍ່ສາມາດຮູ້ຈັກ, ຄົນເບົາປັນຍາບໍ່ສາມາດເຂົ້າໃຈເລື່ອງນີ້:[7]ເມື່ອຄົນຊົ່ວງອກຂຶ້ນມາເຫມືອນຢ່າງຕົ້ນຫຍ້າ, ແລະແມ່ນ
ວ່າເມື່ອບັນດາຄົນເຮັດຊົ່ວທັງປວງຈະເຣີນຂຶ້ນ, ພວກເຂົາກໍຍັງຕ້ອງຖືກທຳລາຍເປັນນິດ.
[8]ຂ້າແດ່ພຣະຢາເວ, ແຕ່ພຣະອົງຈະຊົງຄອບຄອງເປັນນິດ.[9]ເພາະເຫດນີ້, ຂ້າແດ່ພຣະຢາເວ, ຂໍຊົງແນມເບິ່ງພວກສັດຕຣູຂອງພຣະອົງ, ພວກເຂົາ
ຈະພິນາດໄປ! ບັນດາຄົນເຮັດຊົ່ວທັງປວງຈະຕ້ອງຖືກເຮັດໃຫ້ກະແຈກກະຈາຍໄປ.
[10]ພຣະອົງໄດ້ຊົງຍົກເຂົາຂອງຂ້ານ້ອຍຂຶ້ນເຫມືອນຢ່າງເຂົາຂອງງົວກະທິງ; ຂ້ານ້ອຍໄດ້ຮັບການຊົງເຈີມດ້ວຍນ້ຳມັນໃຫມ່.[11]ຕາຂອງຂ້ານ້ອຍໄດ້
ເບິ່ງເຫັນການລົ້ມລົງຂອງພວກສັດຕຣູຂອງຂ້ານ້ອຍ; ຫູຂອງຂ້ານ້ອຍໄດ້ຍິນເຖິງຄາວເຄາະຂອງພວກສັດຕຣູຊົ່ວຮ້າຍຂອງຂ້ານ້ອຍ.
[12]ຄົນຊອບທັມຈະງອກງາມຂຶ້ນຄືຢ່າງຕົ້ນຕານ; ພວກເຂົາຈະເຕີບໃຫຍ່ຂຶ້ນຄືຢ່າງຕົ້ນແປກໃນເລບານອນ.[13]ພວກມັນໄດ້ຖືກປູກໄວ້ໃນ ພຣະວິຫານ
ຂອງພຣະເຈົ້າ; ພວກມັນຈະໆເຣີນຂຶ້ນຕາມເດີ່ນໃນບໍຣິເວນພຣະວິຫານຂອງພຣະເຈົ້າຂອງເຮົາທັງຫລາຍ.
[14]ພວກມັນອອກຜົນແມ່ນວ່າພວກມັນແກ່ແລ້ວ; ພວກມັນຍັງຄົງສົດແລະຂຽວຢູ່,[15]ເພື່ອເປັນການປະກາດວ່າພຣະຢາເວນັ້ນຊົງທ່ຽງທັມ. ພຣະອົງ
ຊົງເປັນຫີນສີລາຂອງຂ້ານ້ອຍ, ແລະບໍ່ມີຄວາມອະທັມໃນພຣະອົງເລີຍ.


generated on Tue Jun 17 19:01:42 2025

93 [1]ພຣະຢາເວຊົງຄອບຄອງ; ພຣະອົງຊົງສວມຄວາມຍິ່ງໃຫຍ່ພຣະຢາເວ; ພຣະຢາເວໄດ້ຊົງສວມແລະໄດ້ຊົງຄາດພຣະອົງເອງດ້ວຍພຣະກຳ
ລັງ. ໂລກໄດ້ຖືກຕັ້ງໄວ້ຢ່າງຫມັ້ນຄົງ; ມັນບໍ່ສາມາດສັ່ນຄອນໄດ້. [2]ພຣະບັນລັງຂອງພຣະອົງກໍໄດ້ຕັ້ງຫມັ້ນຄົງໄວ້ແລ້ວຕັ້ງແຕ່ສມັຍບູຮານ; ພ
ຣະອົງຊົງດຳຣົງຢູ່ຕັ້ງແຕ່ນິຣັນການ.

[3]ຂ້າແດ່ພຣະຢາເວ, ບັນດາມະຫາສະຫມຸດກໍຄຶກຄະນອງ; ພວກມັນໄດ້ຍົກສຽງຂອງພວກມັນຂຶ້ນຄືບັນດາສຽງຄື້ນທີ່ຊັດແຮງ; ແລະສຽງກຶກ
ກ້ອງຂອງມະຫາສະຫມຸດ. [4]ຜູ້ປຣະທັບເທິງທີ່ສູງນັ້ນຊົງຣິດອຳນາດ, ຍິ່ງກວ່າສຽງຊັດແຮງຂອງນ້ຳມາກຫລາຍ, ຍິ່ງກວ່າຄື້ນຈອມທຳລາຍທີ່ຊົງອຳ
ນາດແຫ່ງທະເລ, ພຣະຢາເວຊົງປຣະທັບຢູ່ເທິງບັນລັງສູງສຸດ.
[5]ບັນດາພຣະບັນຊາອັນຈິງຈັງຂອງພຣະອົງນັ້ນ, ເປັນທີ່ໄວ້ວາງໃຈໄດ້; ຂ້າແດ່ພຣະຢາເວ, ພຣະວິຫານຂອງພຣະອົງຢູ່ດ້ວຍຄວາມບໍຣິສຸດເປັນນິດ.


generated on Tue Jun 17 19:01:42 2025

94 [1]ຂ້າແດ່ພຣະຢາເວ, ພຣະເຈົ້າແຫ່ງການແກ້ແຄ້ນ, ພຣະເຈົ້າຜູ້ຊົງເຮັດການແກ້ແຄ້ນ, ຂໍຊົງສ່ອງແສງມາເຫນືອຂ້ານ້ອຍທັງຫລາຍເຖີດ.[2]ຂໍ
ຊົງລຸກຂຶ້ນ, ຂ້າແດ່ພຣະຜູ້ຊົງຕັດສິນໂລກ, ໃຫ້ຄົນຈອງຫອງໄດ້ຮັບຜົນຕອບແທນທີ່ສະສົມຂອງພວກເຂົາ.

[3]ຂ້າແດ່ພຣະຢາເວ, ສ່ວນຄົນຊົ່ວຮ້າຍນັ້ນຈະດີໃຈໄປດົນປານໃດ? ພວກຄົນຊົ່ວຈະຢູ່ອີກດົນປານໃດນໍ?[4]ພວກເຂົາເວົ້າບັນດາຖ້ອຍຄຳ; ຈອງຫອງ
ຂອງພວກເຂົາອອກມາ ບັນດາຄົນທີ່ເຮັດຊົ່ວກໍອວດຕົວ.
[5]ຂ້າແດ່ພຣະເຈົ້າຢາເວ, ພວກເຂົາຢຽບຢ້ຳປະຊາກອນຂອງພຣະອົງ ພວກເຂົາເຮັດໃຫ້ຊົນຊາດທີ່ເປັນຂອງພຣະອົງຕ້ອງເຈັບປວດ.[6]ພວກເຂົາສັງ
ຫານແມ່ຫມ້າຍແລະຄົນຕ່າງດ້າວທີ່ອາສັຍຢູ່ໃນບ້ານເມືອງຂອງພວກເຂົາ, ແລະພວກເຂົາຂ້າລູກກຳພ້າ.[7]ແລະພວກເຂົາກ່າວວ່າ, "ພຣະຢາເວ
ຈະບໍ່ຊົງແນມເບິ່ງ, ພຣະເຈົ້າຂອງຢາໂຄບບໍ່ຊົງສົນໃຈເລື່ອງນີ້."
[8]ພວກຄົນໂງ່ຈ້າ, ຈົ່ງເຂົ້າໃຈ, ພວກຄົນໂງ່ເອີຍ, ເມື່ອໃດພວກເຈົ້າຈະຮຽນຮູ້?[9]ພຣະອົງຜູ້ໄດ້ຊົງສ້າງຫູ, ພຣະອົງຈະບໍ່ຊົງໄດ້ຍິນບໍ່? ພຣະອົງຜູ້
ຊົງປັ້ນດວງຕາ, ພຣະອົງຈະບໍ່ຊົງເຫັນບໍ່?
[10]ພຣະອົງຜູ້ຊົງວາງລະບຽບຕໍ່ປະຊາຊາດ, ພຣະອົງຈະບໍ່ລົງໂທດພວກເຂົາບໍ? ຄືພຣະອົງຜູ້ຊົງປຣະທານຄວາມຮູ້ໃຫ້ມະນຸດ.[11]ພຣະຢາເວຊົງຮູ້
ຄວາມຄິດທັງຫລາຍຂອງມະນຸດ, ວ່າມັນເປັນພຽງອາຍຫມອກ.
[12]ຂ້າແດ່ພຣະຢາເວ, ຜູ້ທີ່ພຣະອົງຊົງສັ່ງສອນກໍເປັນສຸກ ຄືຜູ້ທີ່ພຣະອົງຊົງສອນຈາກກົດບັນຍັດຂອງພຣະອົງ.[13]ພຣະອົງຊົງໃຫ້ເຂົາພັກໃນຍາມ
ຍາກລຳບາກຈົນກວ່າຂຸມຈະໄດ້ຂຸດໄວ້ສຳຫລັບຄົນຊົ່ວ.
[14]ເພາະພຣະຢາເວຈະບໍ່ຊົງປະຖິ້ມປະຊາກອນຂອງພຣະອົງແລະຈະບໍ່ຊົງປ່ອຍມໍຣະດົກຂອງພຣະອົງ.[15]ເພາະການຕັດສິນຈະເປັນທີ່ຊອບທັມອີກ
ຄັ້ງ; ແລະຄົນທີ່ມີໃຈທ່ຽງທັມທັງປວງຈະຕິດຕາມໄປ.[16]ຜູ້ໃດຈະລຸກຂຶ້ນປ້ອງກັນຂ້ານ້ອຍຈາກພວກຄົນເຮັດຊົ່ວ? ຜູ້ໃດຈະຢືນຂຶ້ນຝ່າຍຂ້ານ້ອຍໃນ
ການຕໍ່ສູ້ກັບພວກຄົນຊົ່ວ?
[17]ຖ້າພຣະຢາເວບໍ່ໄດ້ເປັນຄວາມຊ່ວຍເຫລືອຂອງຂ້ານ້ອຍ, ຂ້ານ້ອຍຄົງນອນລົງໃນແດນແຫ່ງຄວາມສະຫງົບໃນບໍ່ຊ້າ.[18]ເມື່ອຂ້ານ້ອຍໄດ້ເວົ້າວ່າ,
"ຕີນຂອງຂ້ານ້ອຍພະລາດລົ້ມ," ຂ້າແດ່ພຣະຢາເວ, ຄວາມຊື່ສັດແຫ່ງພັນທະສັນຍາຂອງພຣະອົງໄດ້ດຶງຂ້ານ້ອຍຂຶ້ນ.[19]ເມື່ອບັນດາຄວາມກັງວົນ
ພາຍໃນຂ້ານ້ອຍມີຫລວງຫລາຍ, ການປອບໃຈຂອງພຣະອົງເຮັດໃຫ້ຂ້ານ້ອຍປິຕິຍິນດີ.
[20]ບັນລັງແຫ່ງການທຳລາຍ ຄືຜູ້ທີ່ສ້າງຄວາມບໍ່ຍຸຕິທັມໂດຍອາສັຍກົດບັນຍັດ, ຈະສາມາດເປັນພັນທະມິດກັບພຣະອົງໄດ້ຫລືບໍ່?[21]ເຂົາທັງຫລາຍ
ສຸມຫົວກັນເພື່ອເອົາຊີວິດຂອງຄົນຊອບທັມແລະພວກເຂົາລົງໂທດຄົນບໍ່ມີຄວາມຜິດໃຫ້ເຖິງຕາຍ.
[22]ແຕ່ພຣະຢາເວ, ຊົງເປັນຫໍຄອຍທີ່ສູງຂອງຂ້ານ້ອຍ, ແລະພຣະເຈົ້າຂອງຂ້ານ້ອຍຊົງເປັນຫີນດານທີ່ລີ້ພັຍຂອງຂ້ານ້ອຍ.[23]ພຣະອົງຈະຊົງໃຫ້
ຄວາມຜິດບາບຂອງພວກເຂົາຕົກມາເທິງພວກເຂົາ ແລະຈະຊົງຕັດພວກເຂົາອອກຖິ້ມໄປໃນຄວາມຊົ່ວຮ້າຍຂອງພວກເຂົາເອງ. ພຣະຢາເວຂອງ
ເຮົາຈະຊົງຕັດພວກເຂົາອອກໄປ.


generated on Tue Jun 17 19:01:42 2025

95 [1]ມາເຖີດ, ໃຫ້ເຮົາຮ້ອງເພງແດ່ພຣະຢາເວ; ໃຫ້ເຮົາຮ້ອງເພງດ້ວຍຄວາມຊື່ນຊົມຍິນດີແດ່ພຣະສີລາແຫ່ງຄວາມພົ້ນຂອງເຮົາ.[2]ໃຫ້ເຮົາເຂົ້າ
ມາຢູ່ຊ້ອງຫນ້າຂອງພຣະອົງດ້ວຍການຂອບພຣະຄຸນ; ໃຫ້ເຮົາຮ້ອງເພງຖວາຍພຣະອົງດ້ວຍບັນດາບົດເພງຍ້ອງຍໍແຫ່ງການສັນຣະເສີນ.
[3]ເພາະພຣະຢາເວຊົງເປັນພຣະເຈົ້າຍິ່ງໃຫຍ່ ແລະຊົງເປັນກະສັດໃຫຍ່ຍິ່ງເຫນືອບັນດາ ພະເຈົ້າທັງປວງ.

[4]ບັນດາທີ່ເລິກຂອງແຜ່ນດິນໂລກຢູ່ໃນມືຂອງພຣະອົງ; ບັນດາທີ່ສູງຂອງພູເຂົາທັງຫລາຍກໍເປັນຂອງພຣະອົງ.[5]ທະເລເປັນຂອງພຣະອົງ, ເພາະພຣະ
ອົງໄດ້ຊົງສ້າງມັນຂຶ້ນມາ, ແລະມືຂອງພຣະອົງໄດ້ຊົງປັ້ນແຜ່ນດິນແຫ້ງ.
[6]ມາເຖີດ, ໃຫ້ເຮົານະມັສະການແລະກົ້ມກາບລົງ; ໃຫ້ເຮົາຄຸກເຂົ່າລົງຕໍ່ຫນ້າຂອງພຣະຢາເວ, ອົງພຣະຜູ້ສ້າງຂອງເຮົາ:[7]ເພາະພຣະອົງຊົງເປັນພ
ຣະເຈົ້າຂອງເຮົາ, ແລະເຮົາເປັນປະຊາກອນແຫ່ງທົ່ງຫຍ້າຂອງພຣະອົງ, ແລະເປັນແກະແຫ່ງມືຂອງພຣະອົງ - ມື້ນີ້ທ່ານທັງຫລາຍຄົງໄດ້ຍິນສຽງ
ຂອງພຣະອົງວ່າ!
[8]"ຢ່າໃຫ້ຈິດໃຈຂອງພວກເຈົ້າດື້ດ້ານ, ຄືຢ່າງທີ່ເມຣິບາ, ຫລືເຫມືອນຢ່າງມື້ນັ້ນທີ່ມັດສາໃນຖິ່ນແຫ້ງແລ້ງກັນດານ.[9]ທີ່ຊຶ່ງບັນພະບຸຣຸດທັງຫລາຍ
ຂອງພວກເຈົ້າ, ໄດ້ທົດລອງເຮົາແລະໄດ້ພິສູດເຮົາ ເຖິງແມ່ນວ່າພວກເຂົາໄດ້ເຫັນການກະທຳທັງຫລາຍຂອງເຮົາມາແລ້ວກໍຕາມ.
[10]ເຮົາໄດ້ໃຈຮ້າຍຄົນຊົ່ວອາຍຸນີ້ເປັນເວລາສີ່ສິບປີແລະໄດ້ກ່າວວ່າ 'ນີ້ຄືຊົນຊາດທີ່ມີຈິດໃຈຝ່າຝືນໄປ; ພວກເຂົາບໍ່ໄດ້ຮູ້ຈັກບັນດາທາງຂອງ
ເຮົາ.'[11]ເພາະສະນັ້ນ ເຮົາຈຶ່ງໄດ້ຄິດດ້ວຍຄວາມໃຈຮ້າຍວ່າພວກເຂົາຈະບໍ່ໄດ້ເຂົ້າສູ່ທີ່ຢຸດພັກຂອງເຮົາເລີຍ."


generated on Tue Jun 17 19:01:42 2025

96 [1]ໂອ, ຈົ່ງຮ້ອງເພງບົດໃຫມ່ຖວາຍແດ່ພຣະຢາເວ, ແຜ່ນດິນໂລກທັງ ຫມົດເອີຍຈົ່ງຮ້ອງເພງແດ່ພຣະຢາເວເຖີດ,[2]ຈົ່ງຮ້ອງເພງແດ່ພຣະຢາເວ,
ຈົ່ງຖວາຍສັນຣະເສີນພຣະນາມຊື່ຂອງພຣະອົງ.

[3]ຈົ່ງປະກາດຄວາມພົ້ນຂອງພຣະອົງທຸກໆມື້ ຈົ່ງເລົ່າເຖິງພຣະສະຫງ່າຣາສີຂອງພຣະອົງໃນທ່າມກາງບັນດາປະຊາຊາດ, ແລະບັນດາພຣະຣາຊ
ກິດອັນມະຫັດສະຈັນຂອງພຣະອົງທ່າມກາງຊົນຊາດທັງປວງ.[4]ເພາະພຣະຢາເວຊົງຍິ່ງໃຫຍ່ແລະຊົງສົມຄວນໄດ້ຮັບການສັນຣະເສີນຢ່າງຍິ່ງ
ໃຫຍ່. ພຣະອົງຊົງເປັນທີ່ຢ້ານກົວເຫນືອບັນດາພະເຈົ້າອື່ນໆ ທັງຫມົດ.
[5]ເພາະບັນດາພະເຈົ້າທັງຫມົດຂອງຊົນຊາດຕ່າງໆເປັນຮູບເຄົາຣົບ, ແຕ່ພຣະຢາເວຊົງເປັນຜູ້ໄດ້ຊົງສ້າງຟ້າສະຫວັນ.[6]ຄວາມສະງ່າງາມແລະ
ກຽຕສັກສີມີຢູ່ຊ້ອງພຣະພັກຂອງພຣະອົງ, ກຳລັງແລະຄວາມງົດງາມຢູ່ໃນສະຖານນະມັສະການຂອງພຣະອົງ. ບັນດາເຊື້ອສາຍຂອງຊົນຊາດທັງ
ຫລາຍເອີຍ.
[7]ຈົ່ງຖວາຍສັນຣະເສີນແດ່ພຣະຢາເວ, ເພາະພຣະສະຫງ່າຣາສີ, ແລະກຳລັງຂອງພຣະອົງ.[8]ຈົ່ງຖວາຍກຽຕແດ່ພຣະຢາເວຊຶ່ງຄວນແກ່ພຣະ
ນາມຊື່ຂອງພຣະອົງ. ຈົ່ງນຳຂອງຖວາຍມາຍັງບໍຣິເວນພຣະວິຫານຂອງພຣະອົງ.
[9]ຈົ່ງກົ້ມກາບຕໍ່ພຣະຢາເວ ດ້ວຍສວມເຄື່ອງແຕ່ງກາຍທີ່ຖວາຍກຽຕແດ່ຄວາມບໍຣິສຸດຂອງພຣະອົງ. ແຜ່ນດິນໂລກທັງຫມົດເອີຍ, ຈົ່ງຕົວສັ່ນຕໍ່ຫນ້າ
ພຣະອົງ.[10]ຈົ່ງກ່າວໃນທ່າມກາງບັນດາປະຊາຊາດວ່າ, "ພຣະຢາເວຊົງຄອບຄອງ." ແຜ່ນດິນໂລກກໍ່ຖືກຕັ້ງໄວ້ແລ້ວ ໂລກບໍ່ສາມາດສັ່ນຄອນໄດ້
ເລີຍ. ພຣະອົງຈະຊົງຕັດສິນຊົນຊາດທັງຫລາຍດ້ວຍຄວາມຍຸຕິທັມ.
[11]ຈົ່ງໃຫ້ຟ້າສະຫວັນຍິນດີ, ແລະຜ່ານດິນໂລກຊື່ນຊົມຍິນດີ; ໃຫ້ທະເລສົ່ງສຽງກຶກກ້ອງແລະທຸກຢ່າງທີ່ຢູ່ໃນນັ້ນໂຫ່ຮ້ອງດ້ວຍຄວາມຍິນດີ.[12]ໃຫ້
ທົ່ງນາທັງຫລາຍແລະທຸກຢ່າງທີ່ຢູ່ໃນນັ້ນຊື່ນຊົມຍິນດີ. ແລ້ວໃຫ້ຕົ້ນໄມ້ທັງຫມົດຂອງປ່າໂຫ່ຮ້ອງດ້ວຍຄວາມຍິນດີ[13]ຢູ່ຕໍ່ຫນ້າພຣະຢາເວ, ເພາະພ
ຣະອົງກຳລັງມາ. ພຣະອົງກຳລັງມາຕັດສິນໂລກພຣະອົງຈະຊົງຕັດສິນໂລກ.ດ້ວຍຄວາມຊອບທັມແລະຈະຊົງຕັດສິນຊົນຊາດທັງຫລາຍດ້ວຍ
ຄວາມຊື່ສັດຂອງພຣະອົງ.


generated on Tue Jun 17 19:01:42 2025

97 [1]ພຣະຢາເວຊົງຄອບຄອງ, ຈົ່ງໃຫ້ແຜ່ນດິນໂລກຊື່ນຊົມຍິນດີ, ໃຫ້ແຜ່ນດິນຊາຍທະເລຫລວງຫລາຍນັ້ນຍິນດີ.[2]ຫມູ່ເມກແລະຄວາມມືດທຶບ
ຢູ່ຮອບພຣະອົງ. ຄວາມຊອບທັມແລະຄວາມຍຸຕິທັມເປັນຮາກຖານແຫ່ງພຣະບັນລັງຂອງພຣະອົງ.

[3]ໄຟຟົ່ງໄປລ່ວງຫນ້າພຣະອົງ ແລະເຜົາຜານບັນດາສັດຕຣູທີ່ຢູ່ທຸກດ້ານຂອງພຣະອົງເສຍ.[4]ຟ້າແລບຂອງພຣະອົງ; ເຮັດໃຫ້ແຜ່ນດິນໂລກສະ
ຫວ່າງຂຶ້ນ ແຜ່ນດິນໂລກເຫັນແລະສັ່ນສະທ້ານ.[5]ພູເຂົາທັງຫລາຍລະລາຍລົງຢ່າງຂີ້ເຜີ້ງຕໍ່ຫນ້າພຣະຢາເວ, ຕໍ່ອົງພຣະຜູ້ເປັນເຈົ້າຂອງແຜ່ນດິນ
ໂລກທັງຫມົດ.
[6]ບັນດາທ້ອງຟ້າປະກາດເຖິງຄວາມຊອບທັມຂອງພຣະອົງ, ແລະບັນດາຊົນຊາດທັງຫມົດເຫັນພຣະສີຣິຂອງພຣະອົງ.[7]ທຸກຄົນທີ່ນະມັສະການບັນ
ດາຮູບເຄົາຣົບແກະສະລັກຈະໄດ້ຮັບຄວາມອັບອາຍ, ຄືທຸກຄົນທີ່ໂອ້ອວດໃນພະເຈົ້າໄຮ້ຄ່າ - ບັນດາພະເຈົ້າທັງຫລາຍຂອງເຈົ້າ, ຈົ່ງກົ້ມກາບຕໍ່ພ
ຣະອົງ.[8]ຊີໂອນໄດ້ຍິນແລະຍິນດີ ແລະເມືອງທັງຫລາຍຂອງຢູດາກໍຍິນດີ ຂ້າແດ່ພຣະຢາເວ ເພາະຄຳຕັດສິນອັນຊອບທັມຂອງພຣະອົງ.
[9]ຂ້າແດ່ພຣະຢາເວ, ເພາະພຣະອົງຊົງ, ເປັນອົງຜູ້ສູງສຸດເຫນືອແຜ່ນດິນໂລກທັງຫມົດ. ພຣະອົງຊົງເປັນທີ່ຍົກຍ້ອງຢ່າງສູງເຫນືອບັນດາພະເຈົ້າ
ທັງປວງ.[10]ບັນດາຜູ້ຮັກພຣະຢາເວເອີຍ, ຈົ່ງກຽດຊັງຄວາມຊົ່ວ ພຣະອົງຊົງຄຸ້ມຄອງບັນດາຊີວິດຂອງປະຊາຊົນຂອງພຣະອົງ, ແລະພຣະອົງຊົງ
ເອົາພວກເຂົາອອກຈາກມືຂອງຄົນຊົ່ວ.[11]ຄວາມສະຫວ່າງໄດ້ສ່ອງໄວ້ເພື່ອຄົນຊອບທັມ ແລະສ່ອງຄວາມຍິນດີໄວ້ເພື່ອຄົນທີ່ມີໃຈຊື່ສັດ ທ່ານທັງ
ຫລາຍຜູ້ຊອບທັມເອີຍ.
[12]ຈົ່ງຍິນດີໃນພຣະຢາເວເຖີດ, ແລະຈົ່ງຖວາຍຂອບພຣະຄຸນເມື່ອພວກທ່ານຣະນຶກເຖິງຄວາມບໍຣິສຸດຂອງພຣະອົງ.

 generated on Tue Jun 17 19:01:42 2025

98 ບົດເພງສັນຣະເສີນ.[1]ໂອ, ຈົ່ງຮ້ອງເພງບົດໃຫມ່ຖວາຍແດ່ພຣະຢາເວ, ເພາະພຣະອົງໄດ້ຊົງເຮັດສິ່ງອັສະຈັນແລະຫນ້າງຶດງ້ຕ່າງໆ;
ພຣະຫັດຂວາແລະພຣະກໍາລັງບໍຣິສຸດຂອງພຣະອົງໄດ້ໃຫ້ຊັຍຊະນະແກ່ພຣະອົງເອງ.[2]ພຣະຢາເວໄດ້ຊົງໃຫ້ຄວາມພົ້ນຂອງພຣະອົງເປັນທີ່ຮູ້
ຈັກ; ພຣະອົງໄດ້ຊົງສໍາແດງຄວາມຍຸຕິທັມຂອງພຣະອົງ ແກ່ບັນດາປະຊາຊາດທັງຫມົດຢ່າງເປີດເຜີຍ.

[3]ພຣະອົງຊົງຣະນຶກເຖິງຄວາມຈົງຮັກພັກດີແຫ່ງພັນທະສັນຍາແລະຄວາມຊື່ສັດຂອງພຣະອົງ, ຕໍ່ຄອບຄົວອິສະຣາເອນ ບັນດາທີ່ສຸດປາຍແຜ່ນດິນ
ໂລກທັງຫມົດຈະໄດ້ເຫັນຊັຍຊະນະຂອງພຣະເຈົ້າຂອງເຮົາ.[4]ແຜ່ນດິນໂລກທັງຫມົດເອີຍ; ຈົ່ງໂຫ່ຮ້ອງດ້ວຍຄວາມຊື່ນບານຖວາຍແດ່ພຣະຢາເວ,
ຈົ່ງໂຫ່ຮ້ອງອອກມາເປັນບົດເພງ.
[5]ຈົ່ງຮ້ອງເພງດ້ວຍຄວາມຍິນດີ ແລະຮ້ອງເພງສັນຣະເສີນ, ຈົ່ງຮ້ອເພງສັນຣະເສີນຖວາຍແດ່ພຣະຢາເວ, ດ້ວຍພິນເຂົາຄູ່ ແລະດ້ວຍບົດເພງຕາມ
ທໍານອງ.[6]ດ້ວຍສຽງແກແລະສຽງເປົ່າເຂົາສັດ, ຈົ່ງເຮັດສຽງຊື່ນບານຕໍ່ຫນ້າກະສັດ ຄືພຣະຢາເວ.
[7]ໃຫ້ທະເລກັບທຸກສິ່ງທີ່ຢູ່ໃນນັ້ນໂຫ່ຮ້ອງ, ອີກທັງແຜ່ນດິນໂລກກັບບັນດາຜູ້ອາສັຍຢູ່ໃນນັ້ນ![8]ໃຫ້ແມ່ນ້ໍາທັງຫລາຍຕົບມືຂອງພວກມັນ ແລະໃຫ້
ບັນດາພູເຂົາໂຫ່ຮ້ອງດ້ວຍຄວາມຊື່ນບານ.[9]ພຣະຢາເວກໍາລັງມາຕັດສິນໂລກ, ພຣະອົງຈະຊົງຕັດສິນໂລກດ້ວຍຄວາມຊອບທັມ, ແລະຈະຊົງຕັດ
ສິນຊົນຊາດທັງຫລາຍດ້ວຍຄວາມຍຸຕິທັມ.


generated on Tue Jun 17 19:01:42 2025

99 [1]ພຣະຢາເວຊົງຄອບຄອງ, ໃຫ້ຊົນຊາດທັງຫລາຍຕົວສັ່ນ. ພຣະອົງຢູ່ເທິງບັນລັງເໜືອເຄຣຸບ; ແຜ່ນດິນໂລກກໍໄຫວ.[2]ພຣະຢາເວຊົງຍິ່ງໃຫຍ່
ໃນຊີໂອນ; ພຣະອົງຊົງເປັນທີ່ຍົກຍ້ອງເຊີດຊູເໜືອບັນດາປະຊາຊົນທັງຫມົດ.[3]ຈົ່ງໃຫ້ພວກເຂົາສັນຣະເສີນພຣະນາມຊື່ອັນຍິ່ງໃຫຍ່ແລະນ່າ
ຢ້ານກົວຂອງພຣະອົງ; ພຣະອົງຊົງບໍຣິສຸດ.

[4]ພຣະມາຫາກະສັດຊົງຣິທານຸພາບ, ແລະພຣະອົງຊົງຮັກຄວາມຍຸຕິທັມ. ພຣະອົງໄດ້ຊົງຕັ້ງຄວາມຍຸຕິທັມ ພຣະອົງໄດ້ຊົງເຮັດຄວາມຊອບທັມ
ແລະຄວາມຍຸຕິທັມໃນຢາໂຄບ.[5]ຈົ່ງສັນຣະເສີນພຣະຢາເວ ພຣະເຈົ້າ, ຂອງເຮົາແລະນະມັສະການທີ່ແທ່ນຮອງຕີນຂອງພຣະອົງ. ພຣະອົງຊົງບໍ
ຣິສຸດ.
[6]ໂມເຊແລະອາໂຣນໄດ່ຢູ່ທ່າມກາງພວກປະໂລຫິດຂອງພຣະອົງ ແລະຊາມູເອນໄດ້ຢູ່ທ່າມກາງພວກທີ່ອະທິຖານຕໍ່ພຣະອົງ. ທ່ານເຫລົ່ານັ້ນໄດ້ອະ
ທິຖານຕໍ່ພຣະຢາເວ ແລະພຣະອົງໄດ້ຊົງຕອບທ່ານເຫລົ່ານັ້ນ.[7]ພຣະອົງໄດ້ກ່າວກັບທ່ານເຫລົ່ານັ້ນຈາກເສົາເມກ. ພວກທ່ານໄດ້ຮັກສາບັນດາພຣະ
ບັນຊາອັນຈິງຈັງຂອງພຣະອົງແລະບັນດາກົດບັນຍັດທີ່ພຣະອົງໄດ້ຊົງປຣະທານແກ່ພວກທ່ານ.
[8]ຂ້າແດ່ພຣະຢາເວພຣະເຈົ້າ, ຂອງຂ້ານ້ອຍທັງຫມົດ. ພຣະອົງໄດ້ຊົງຕອບທ່ານເຫລົ່ານັ້ນ ພຣະອົງຊົງເປັນພຣະເຈົ້າ, ຜູ້ຊົງອະພັຍໂທດສຳລັບ
ທ່ານເຫລົ່ານັ້ນ ແຕ່ຊົງເປັນຜູ້ລົງໂທດຕໍ່ການກະທຳຜິດບາບທັງຫລາຍຂອງທ່ານເຫລົ່ານັ້ນດ້ວຍ.[9]ຈົ່ງສັນຣະເສີນພຣະຢາເວພຣະເຈົ້າ, ຂອງເຮົາ
ແລະຈົ່ງນະມັສະການທີ່ພູເຂົາບໍຣິສຸດຂອງພຣະອົງ, ເພາະພຣະຢາເວພຣະເຈົ້າ, ຂອງເຮົາຊົງບໍຣິສຸດ.

 generated on Tue Jun 17 19:01:42 2025

100 ບົດເພງສັນຣະເສີນສຳລັບຂອບພຣະຄຸນພຣະເຈົ້າ.[1]ແຜ່ນດິນໂລກທັງ ຫມົດເອີຍ, ຈົ່ງໂຫ່ຮ້ອງດ້ວຍຄວາມຊື່ນບານຖວາຍແດ່ພຣະຢາເວ,
[2]ຈົ່ງຮັບໃຊ້ພຣະຢາເວດ້ວຍຄວາມຍິນດີ; ຈົ່ງເຂົ້າມາຢູ່ຕໍ່ຫນ້າຂອງພຣະອົງດ້ວຍການຮ້ອງເພງຊື່ນບານ.

[3]ຈົ່ງຮູ້ເຖີດວ່າພຣະຢາເວຊົງເປັນພຣະເຈົ້າ; ພຣະອົງໄດ້ຊົງສ້າງເຮົາທັງຫລາຍ, ແລະເຮົາກໍເປັນຂອງພຣະອົງ. ເຮົາເປັນປະຊາກອນຂອງພຣະອົງ,
ແລະເປັນແກະແຫ່ງທົ່ງຫຍ້າຂອງພຣະອົງ.
[4]ຈົ່ງເຂົ້າສູ່ປະຕູທັງຫລາຍຂອງພຣະອົງ ດ້ວຍການຂອບພຣະຄຸນ ແລະເຂົ້າບັນດາບໍຣິເວນພຣະວິຫານຂອງພຣະອົງດ້ວຍການສັນຣະເສີນ ຈົ່ງ
ຂອບພຣະຄຸນພຣະອົງແລະຈົ່ງຖວາຍສັນຣະເສີນແດ່ພຣະນາມຊື່ຂອງພຣະອົງ,[5]ເພາະພຣະຢາເວຊົງປະເສີດ; ຄວາມຊື່ສັດແຫ່ງພັນທະສັນຍາ
ຂອງພຣະອົງດຳຣົງເປັນນິດແລະຄວາມແທ້ຈິງຂອງພຣະອົງດຳຣົງຢູ່ຊົ່ວເຊື້ອຊາດ.


generated on Tue Jun 17 19:01:42 2025

101 ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍຈະຮ້ອງເພງເລື່ອງຄວາມຊື່ສັດແຫ່ງຄຳສັນຍາແລະຄວາມຍຸຕິທັມ; ຂ້າແດ່ພຣະຢາເວ, ຂ້ານ້ອຍ
ຈະຮ້ອງເພງສັນຣະເສີນຖວາຍແດ່ພຣະອົງ.

[2]ຂ້ານ້ອຍຈະດຳເນີນໃນທາງແຫ່ງຄວາມຊື່ສັດສຸຈະຣິດ. ໂອ, ເມື່ອໃດພຣະອົງຈະມາຫາຂ້ານ້ອຍ? ຂ້ານ້ອຍຈະດຳເນີນດ້ວຍຄວາມຊື່ສັດສຸຈະຣິດ
ພາຍໃນເຮືອນຂອງຂ້ານ້ອຍ.[3]ຂ້ານ້ອຍຈະບໍ່ຕັ້ງການກະທຳຜິດໄວ້ຕໍ່ຫນ້າຕໍ່ຕາຂ້ານ້ອຍ; ຂ້ານ້ອຍຊັງຄວາມຊົ່ວອັນບໍ່ມີຄ່າ; ມັນຈະບໍ່ເກາະຕິດຂ້າ
ນ້ອຍ.
[4]ພວກຄົນບໍ່ຈິງໃຈຈະໄປຈາກຂ້ານ້ອຍ; ຂ້ານ້ອຍບໍ່ກ່ຽວພັນກັບຄວາມຊົ່ວຮ້າຍ.[5]ຂ້ານ້ອຍຈະທຳລາຍຜູ້ທີ່ໃສ່ຮ້າຍເພື່ອນບ້ານຢ່າງລັບໆ. ຂ້ານ້ອຍ
ຈະບໍ່ທົນຕໍ່ຄົນທີ່ເຮັດຕົວໂອ້ອວດແລະມີທ່າທີຈອງຫອງ.[6]ຂ້ານ້ອຍຈະເບິ່ງຫາຄົນຊື່ສັດແຫ່ງແຜ່ນດິນເພື່ອໃຫ້ນັ່ງທີ່ດ້ານຂ້າງຂ້ານ້ອຍ. ບັນດາຜູ້ດຳ
ເນີນຢູ່ໃນທາງຊື່ສັດສຸຈະຣິດຈະຮັບໃຊ້ຂ້ານ້ອຍ.
[7]ພວກຄົນຫລອກລວງຈະບໍ່ເຫລືອຢູ່ໃນເຮືອນຂອງຂ້ານ້ອຍ; ພວກຄົນຂີ້ຕົວະບໍ່ໄດ້ຮັບການຕ້ອນຮັບຕໍ່ຫນ້າຕໍ່ຕາຂອງຂ້ານ້ອຍ.[8]ທຸກໆເຊົ້າ ຂ້ານ້ອຍ
ຈະທຳລາຍຄົນຊົ່ວທັງຫມົດຈາກແຜ່ນດິນ; ຂ້ານ້ອຍຈະຍ້າຍບັນດາຄົນເຮັດຊົ່ວທັງຫມົດອອກໄປຈາກນະຄອນຂອງພຣະຢາເວ.


generated on Tue Jun 17 19:01:42 2025

102 ຄຳອະທິຖານຂອງຄົນທີ່ທຸກທໍຣະມານເມື່ອລາວຖືກຄອບງຳ ແລະໄຫ້ສຽງຮ້ອງຂອງລາວຕໍ່ຫນ້າພຣະຢາເວ.[1]ຂ້າແດ່ພຣະຢາເວ, ຂໍຊົງຟັງ
ຄຳອະທິຖານຂອງຂ້ານ້ອຍ, ຂໍຊົງຟັງຄຳຮ້ອງຫາຂອງຂ້ານ້ອຍຕໍ່ພຣະອົງ.[2]ຂໍຢ່າຊົງລີ້ຫນ້າຂອງພຣະອົງໄປຈາກຂ້ານ້ອຍໃນຍາມແຫ່ງ
ຄວາມຍາກລຳບາກ. ຂໍຊົງຟັງຂ້ານ້ອຍ. ເມື່ອຂ້ານ້ອຍຮ້ອງຫາຕໍ່ພຣະອົງຂໍຊົງຕອບຂ້ານ້ອຍໂດຍໄວ.

[3]ເພາະວັນເວລາຂອງຂ້ານ້ອຍຜ່ານໄປເຫມືອນຢ່າງຄວັນໄຟ, ແລະກະດູກຂອງຂ້ານ້ອຍໄຫມ້ໄປເຫມືອນຢ້າງໄຟ.[4]ໃຈຂອງຂ້ານ້ອຍຖືກຢຽບຢ່ຳ,
ແລະຂ້ານ້ອຍເປັນຄືຫຍ້າທີ່ຫ່ຽວໄປ. ຂ້ານ້ອຍລືມທີ່ຈະກິນອາຫານໃດໆ.
[5]ດ້ວຍສຽງຮ້ອງຄາງບໍ່ຢຸດຂອງຂ້ານ້ອຍ, ຂ້ານ້ອຍຈຶ່ງໄດ້ຈ່ອຍລົງຢ່າງຫລາຍ.[6]ຂ້ານ້ອຍເປັນຄືນົກປ່າແຫ່ງຖິ່ນແຫ້ງແລ້ງກັນດານ; ຂ້ານ້ອຍກາຍ
ເປັນຄືນົກເຄົ້າແມວໃນບ່ອນຮົກຮ້າງເພພັງ.
[7]ຂ້ານ້ອຍນອນບໍ່ຫລັບຄືນົກໂດດດ່ຽວ, ເທິງຫລັງຄາບ້ານ.[8]ພວກສັດຕຣູຂອງຂ້ານ້ອຍກໍຫຍໍ້ຫຍັນຂ້ານ້ອຍຕະຫລອດທັງວັນ; ຜູ້ທີ່ເຍີ້ຍຫຍັນຂ້າ
ນ້ອຍໃຊ້ຊື່ຂອງຂ້ານ້ອຍປ້ອຍດ່າ.
[9]ຂ້ານ້ອຍກິນຂີ້ເຖົ່າຄືອາຫານແລະເຄື່ອງດື່ມຂອງຂ້ານ້ອຍດ້ວຍນ້ຳຕາ.[10]ເພາະຄວາມໃຈຮ້າຍອັນຮຸນແຮງຂອງພຣະອົງ, ພຣະອົງໄດ້ຊົງຍົກຂ້າ
ນ້ອຍຂຶ້ນແລະຊົງໂຍນຂ້ານ້ອຍລົງ.
[11]ວັນເວລາຂອງຂ້ານ້ອຍເປັນຄືເງົາທີ່ຈາງຫາຍໄປ, ແລະຂ້ານ້ອຍໄດ້ຫ່ຽວໄປຄືຫຍ້າ.[12]ຂ້າແດ່, ພຣະຢາເວ, ແຕ່ພຣະອົງຊົງດຳຣົງຢູ່ເປັນນິດ,
ແລະພຣະນາມຊື່ຂອງພຣະອົງດຳຣົງຢູ່ທຸກຊົ່ວເຊື້ອຊາດ,
[13]ພຣະອົງຈະຊົງລຸກຂຶ້ນແລະຊົງເມດຕາຊີໂອນ. ບັດນີ້ຄືເວລາທີ່ຈະຊົງກະຣຸນາເມືອງນີ້ ເພາະເວລາທີ່ກຳຫນົດນັ້ນມາເຖິງແລ້ວ.[14]ເພາະບັນດາຜູ້
ຮັບໃຊ້ຂອງພຣະອົງປະຄອງບັນດາກ້ອນຫີນຂອງເມືອງນີ້ດ້ວຍຮັກແລະຮູ້ສຶກສົງສານຝຸ່ນດິນແຫ່ງຊາກຮົກຮ້າງເພພັງ.[15]ບັນດາປະຊາຊາດຈະຢຳ
ເກງພຣະນາມຊື່ຂອງພຣະອົງ, ຄືພຣະຢາເວ, ແລະບັນດາກະສັດທັງຫມົດແຫ່ງແຜ່ນດິນໂລກ ຈະຖວາຍກຽຕແດ່ພຣະສະຫງ່າຣາສີຂອງພຣະ
ອົງ.[16]ພຣະຢາເວຈະຊົງສ້າງຊີໂອນຂຶ້ນອີກແລະຈະຊົງປະກົດດ້ວຍພຣະສະຫງ່າຣາສີຂອງພຣະອົງ.
[17]ໃນເວລານັ້ນ, ພຣະອົງຈະຊົງຕອບສະຫນອງຕໍ່ຄຳອະທິຖານຂອງຄົນສິ້ນເນື້ອປະດາຕົວ; ພຣະອົງຈະບໍ່ຊົງປະຕິເສດຄຳອະທິຖານຂອງພວກເຂົາ.
[18]ເລື່ອງນີ້ຈະຖືກບັນທຶກໄວ້ໃຫ້ຄົນຮຸ້ນຫລັງ, ແລະເພື່ອປະຊາຊົນທີ່ຍັງບໍ່ເກີດມາຈະສັນຣະເສີນພຣະຢາເວ.
[19]ເພາະພຣະອົງໄດ້ແນມເບິ່ງຈາກທີ່ສູງອັນບໍຣິສຸດ; ພຣະຢາເວໄດ້ແນມເບິ່ງແຜ່ນດິນໂລກລົງມາຈາກຟ້າສະຫວັນ,[20]ເພື່ອຊົງຟັງສຽງຄ່ຳຄວນຂອງ
ບັນດານັກໂທດ, ເພື່ອຊົງປ່ອຍບັນດາຄົນທີ່ໄດ້ຮັບໂທດເຖິງຕາຍໃຫ້ເປັນອິສຣະ.
[21]ແລ້ວມະນຸດທັງຫລາຍຈະປະກາດພຣະນາມຊື່ຂອງພຣະຢາເວ, ໃນຊີໂອນແລະກ່າວຄຳສັນຣະເສີນຂອງພຣະອົງໃນເຢຣູຊາເລັມ[22]ເມື່ອຊົນຊາດ
ແລະອານາຈັກທັງຫລາຍມາຊຸມນຸມກັນເພື່ອຮັບໃຊ້ພຣະຢາເວ.
[23]ພຣະອົງໄດ້ຊົງເອົາກຳລັງຂອງຂ້ານ້ອຍໄປໃນເວລາເຄິ່ງກາງຂອງຊີວິດ. ພຣະອົງໄດ້ຊົງຫຍໍ້ເວລາຂອງຂ້ານ້ອຍ.[24]ຂ້ານ້ອຍໄດ້ທູນວ່າ, "ຂ້າແດ່ພ
ຣະເຈົ້າ, ຂອງຂ້ານ້ອຍ ຂໍຢ່າຊົງນຳຂ້ານ້ອຍໄປໃນເວລາເຄິ່ງກາງຂອງຊີວິດ; ພຣະອົງຊົງສະຖິດຢູ່ທີ່ນີ້ຕະຫລອດທຸກຊົ່ວເຊື້ອຊາດ.
[25]ໃນສມັຍບູຮານ; ພຣະອົງຊົງວາງໂລກໃນທີ່ຂອງມັນ ຟ້າສະຫວັນກໍເປັນຜົນງານແຫ່ງພຣະຫັດຂອງພຣະອົງ.[26]ສິ່ງເຫລົ່ານີ້ຈະພິນາດໄປແຕ່ພຣະ
ອົງຈະຊົງດຳຣົງຢູ່; ສິ່ງເຫລົ່ານີ້ທັງຫມົດຈະເກົ່າໄປຄືເຄື່ອງນຸ່ງຫົ່ມ ພຣະອົງຈະຊົງຖອດສິ່ງເຫລົ່ານີ້ອອກ, ແລະສິ່ງເຫລົ່ານີ້ກໍຈະສູນຫາຍໄປ.[27]ແຕ່
ພຣະອົງຊົງຄືເກົ່າ, ແລະປີເດືອນຂອງພຣະອົງຈະບໍ່ມີທີ່ສິ້ນສຸດ.
[28]ລູກຫລານຂອງບັນດາຜູ້ຮັບໃຊ້ຂອງພຣະອົງຈະມີຊີວິດຢູ່ຕໍ່ໄປ, ແລະເຊື້ອສາຍຂອງພວກເຂົາຈະມີຊີວິດຢູ່ຕໍ່ຫນ້າພຣະອົງ."


generated on Tue Jun 17 19:01:42 2025

103 ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍຖວາຍສັນຣະເສີນແດ່ພຣະຢາເວ, ດ້ວຍສິ້ນສຸດຊີວິດຂອງຂ້ານ້ອຍແລະດ້ວຍທຸກສິ່ງທີ່ມີຢູ່ພາຍ
ໃນຂ້ານ້ອຍ, ຂ້ານ້ອຍຖວາຍສັນຣະເສີນແດ່ພຣະນາມຊື່ບໍຣິສຸດຂອງພຣະອົງ.[2]ຂ້ານ້ອຍຖວາຍສັນຣະເສີນແດ່ພຣະຢາເວ, ດ້ວຍສິ້ນສຸດຊີ
ວິດຂອງຂ້ານ້ອຍ ແລະຂ້ານ້ອຍຣະນຶກເຖິງການກະທຳອັນປະເສີດຂອງພຣະອົງທັງຫມົດ.

[3]ພຣະອົງຊົງອະພັຍໂທດຄວາມບາບທັງຫມົດຂອງທ່ານ; ພຣະອົງຊົງຮັກສາໂຣກພັຍໄຂ້ເຈັບທັງຫມົດຂອງທ່ານ.[4]ພຣະອົງຊົງໄຖ່ຊີວິດຂອງທ່ານ
ຈາກຄວາມພິນາດ; ພຣະອົງຊົງສວມມົງກຸດທ່ານດ້ວຍຄວາມຊື່ສັດແຫ່ງຄຳສັນຍາແລະການກະທຳແຫ່ງຄວາມເມດຕາອັນອ່ອນໂຍນ.[5]ພຣະອົງ
ຊົງໃຫ້ຊີວິດຂອງທ່ານອີ່ມດ້ວຍຂອງດີທັງຫລາຍເພື່ອໃຫ້ວັຍຫນຸ່ມຂອງທ່ານກັບຄືນມາໃຫມ່ຢ່າງນົກອິນຊີ.
[6]ພຣະຢາເວຊົງກະທຳການທ່ຽງທັມແລະຊົງກະທຳການຍຸຕິທັມແກ່ທຸກຄົນທີ່ຖືກບີບບັງຄັບ.[7]ພຣະອົງຊົງສຳແດງແຜນການຂອງພຣະອົງໃຫ້ໂມເຊ
ໄດ້ຮູ້, ຄືບັນດາການກະທຳຂອງພຣະອົງແກ່ເຊື້ອສາຍອິສະຣາເອນ.[8]ພຣະຢາເວຊົງພຣະກະຣຸນາແລະຊົງມີພຣະຄຸນ; ພຣະອົງຊົງອົດກັ້ນ; ພຣະ
ອົງຊົງຊື່ສັດຢ່າງຍິ່ງໃຫຍ່ຕາມພັນທະສັນຍາ.
[9]ພຣະອົງຈະບໍ່ຊົງຕິສອນຢູ່ສະເຫມີ; ພຣະອົງບໍ່ໃຈຮ້າຍຢູ່ສະເຫມີ.[10]ພຣະອົງບໍ່ໄດ້ຊົງກະທຳຕໍ່ເຮົາຕາມທີ່ສົມຄວນແກ່ບາບຂອງເຮົາ ຫລືຕອບສະ
ຫນອງເຮົາຕາມຂະຫນາດຄວາມຊົ່ວຂອງເຮົາ.
[11]ເພາະຟ້າສະຫວັນສູງເຫນືອແຜ່ນດິນໂລກຫລາຍເທົ່າໃດ, ຄວາມຊື່ສັດແຫ່ງພະສັນຍາຂອງພຣະອົງທີ່ມີຕໍ່ຜູ້ທີ່ຍຳເກງພຣະອົງກໍໃຫຍ່ຍິ່ງເທົ່າ
ນັ້ນ.[12]ຕະເວັນອອກໄກຈາກຕະເວັນຕົກຫລາຍເທົ່າໃດ, ນີ້ກໍຄືໄລຍະທີ່ພຣະອົງໄດ້ຊົງປົດການເຮັດຜິດບາບຂອງເຮົາໄປໄກຈາກເຮົາເທົ່ານັ້ນ.[13]ພໍ່
ເມດຕາລູກໆຂອງຕົນຫລາຍເທົ່າໃດ, ພຣະຢາເວກໍຊົງເມດຕາຄົນທີ່ຍຳເກງພຣະອົງຫລາຍເທົ່ານັ້ນ.
[14]ເພາະພຣະອົງຊົງຮູ້ວ່າເຮົາໄດ້ຖືກປັ້ນຂຶ້ນມາຢ່າງໃດ; ພຣະອົງຊົງຮູ້ວ່າເຮົາເປັນແຕ່ຝຸ່ນດິນ.[15]ສ່ວນມະນຸດນັ້ນ, ວັນເວລາຂອງເຂົາເປັນຄືຫຍ້າ;
ເຈົ້າຈະໆເຣີນຂຶ້ນຄືດອກໄມ້ໃນທົ່ງນາ.[16]ລົມກໍພັດພາມັນໄປ, ແລະມັນກໍຫາຍໄປ, ແລະບໍ່ມີໃຜບອກໄດ້ເຫັນເຖິງທີ່ຊຶ່ງມັນເຄີຍງອກຂຶ້ນມາກ່ອນ.
[17]ແຕ່ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະຢາເວ, ນັ້ນດຳຣົງຢູ່ຕັ້ງແຕ່ນິຣັນການເຖິງນິຣັນການ ຕໍ່ຜູ້ທີ່ຍຳເກງພຣະອົງ. ຄວາມຊອບທັມຂອງພຣະ
ອົງຍືນຍາວໄປເຖິງເຊື້ອສາຍທັງຫລາຍຂອງພວກເຂົາ.[18]ພວກເຂົາຮັກສາຄຳສັນຍາຂອງພຣະອົງ ແລະຣະນຶກເຖິງການເຮັດຕາມບັນດາຂໍ້ບັງຄັບ
ຂອງພຣະອົງ.[19]ພຣະຢາເວ, ໄດ້ຊົງສະຖາປະນາບັນລັງຂອງພຣະອົງໄວ້ໃນຟ້າສະຫວັນ, ແລະຣາຊອານາຈັກຂອງພຣະອົງຄອບຄອງເຫນືອທຸກ
ຄົນ.
[20]ທ່ານທັງຫລາຍຜູ້ເປັນທູດສະຫວັນຂອງພຣະອົງ, ຈົ່ງຖວາຍສັນຣະເສີນແດ່ພຣະຢາເວ, ທ່ານຜູ້ຊົງຣິດອຳນາດຊຶ່ງເປັນຜູ້ທີ່ເຂັ້ມແຂງແລະເຮັດ
ຕາມຄຳສັ່ງຂອງພຣະອົງ ແລະເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ.[21]ຈົ່ງຖວາຍສັນຣະເສີນແດ່ພຣະຢາເວ, ຄືພວກທ່ານຜູ້ເປັນບັນດາຜູ້ຮັບໃຊ້ຂອງພຣະ
ອົງ ທີ່ເຮັດຕາມໃຈຂອງພຣະອົງ, ສິ່ງທີ່ພຣະອົງຊົງສ້າງເອີຍ.[22]ຈົ່ງຖວາຍສັນຣະເສີນແດ່ພຣະຢາເວ, ໃນທຸກສະຖານທີ່ທີ່ພຣະອົງຄອບຄອງຢູ່. ຂ້າ
ນ້ອຍຖວາຍສັນຣະເສີນແດ່ພຣະຢາເວ ດ້ວຍສິ້ນສຸດຊີວິດຂອງຂ້ານ້ອຍ.



generated on Tue Jun 17 19:01:42 2025

104 [1]ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ, ຂ້ານ້ອຍຖວາຍສັນຣະເສີນແດ່ພຣະຢາເວດ້ວຍສິ້ນສຸດຊີວິດຂອງຂ້ານ້ອຍ, ພຣະອົງໄດ້ຊົງ
ສວມຄວາມສະງ່າງາມ ແລະຄວາມຍິ່ງໃຫຍ່. [2]ພຣະອົງຊົງຫຸ້ມຫໍ່ພຣະອົງເອງດ້ວຍແສງສະຫວ່າງຣັສມີ ພຣະອົງຊົງກາງຟ້າສະຫວັນອອກ
ດັ່ງຜ້າເຕັນ. [3]ພຣະອົງຊົງວາງຄານທີ່ຂອງພຣະອົງໄວ້ເທິງເມກ; ພຣະອົງຊົງໃຫ້ເມກທັງຫລາຍເປັນມ້າຂອງພຣະອົງ; ພຣະອົງຊົງດຳເນີນໄປເທິງປີກ
ຂອງລົມ.

[4]ພຣະອົງຊົງໃຊ້ລົມໃຫ້ເປັນທູດສື່ສານຂອງພຣະອົງ ຊົງໃຫ້ແສງຟ້າແມບເຫລື້ອມເປັນຜູ້ຮັບໃຊ້ຂອງພຣະອົງ. [5]ພຣະອົງໄດ້ຊົງຕັ້ງແລະວາງຮາກ
ຖານຂອງແຜ່ນດິນໂລກ ແລະມັນຈະບໍ່ສັ່ນຄອນເລີຍ.
[6]ພຣະອົງໄດ້ຊົງຫຸ້ມຫໍ່ແຜ່ນດິນໂລກດ້ວຍນ້ຳເຫມືອນດັ່ງເຄື່ອງນຸ່ງຫົ່ມ; ນ້ຳກໍໄດ້ປົກຄຸມພູເຂົາທັງຫລາຍ. [7]ການນາບຂູ່ຂອງພຣະອົງເຮັດໃຫ້ນ້ຳ
ນັ້ນຫລົບຖອຍໄປ; ໂດຍສຽງຮ້ອງສັ່ງດັ່ງຟ້າຮ້ອງຂອງພຣະອົງ ເມື່ອພຣະອົງຊົງສັ່ງນ້ຳນັ້ນກໍຫນີໄປ.
[8]ບັນດາພູເຂົາຈຶ່ງໄດ້ຟຸດຂຶ້ນ, ແລະຮ່ອມພູທັງຫລາຍກໍໄດ້ຂະຫຍາຍອອກເຂົ້າສູ່ທີ່ ທີ່ພຣະອົງໄດ້ຊົງກຳນົດໄວ້ສຳລັບພວກມັນ. [9]ພຣະອົງໄດ້ຊົງວາງ
ຂອບເຂດໄວ້ໃຫ້ພວກມັນທີ່ພວກມັນຈະຂ້ວາມໄປບໍ່ໄດ້; ພວກມັນຈະບໍ່ໄດ້ປົກຄຸມແຜ່ນດິນອີກ.
[10]ພຣະອົງໄດ້ຊົງໃຫ້ນ້ຳພຸຕ່າງໆ; ໄຫລລົງໄປສູ່ຮ່ອມພູທັງຫລາຍ ລຳນ້ຳເຫລົ່ານັ້ນກໍໄຫລໄປລະຫວ່າງເນີນພູດ້ວຍ. [11]ລຳນ້ຳເຫລົ່ານັ້ນໄດ້ສົ່ງນ້ຳໃຫ້
ແກ່ບັນດາສັດປ່າທັງຫມົດແຫ່ງທ້ອງທົ່ງ; ໃຫ້ພວກລໍປ່າໄດ້ບັນເທົາຄວາມກະຫາຍນ້ຳຂອງພວກມັນ. [12]ທີ່ແຄມຝັ່ງແມ່ນ້ຳນັ້ນ ຝູງນົກໃນອາກາດຈຶ່ງ
ໄດ້ສ້າງຮັງຂອງພວກມັນ; ພວກນົກຕ່າງໆກໍຮ້ອງເພງໃນທ່າມກາງກິ່ງໄມ້ເຫລົ່ານັ້ນ.
[13]ພຣະອົງຊົງຫົດພູເຂົາດ້ວຍນ້ຳຈາກບັນດາຄັງນ້ຳຂອງພຣະອົງໃນທ້ອງຟ້າ. ແຜ່ນດິນໂລກກໍໄດ້ອີ່ມດ້ວຍຜົນແຫ່ງການກະທຳຂອງພຣະອົງ. [14]ພຣະ
ອົງຊົງໃຫ້ຫຍ້າງອກຂຶ້ນມາເພື່ອສັດລ້ຽງ ແລະຊົງໃຫ້ຜັກທັງຫລາຍເພື່ອມະນຸດໄດ້ເພາະປູກ ເພື່ອມະນຸດຈະເຮັດໃຫ້ເກີດອາຫານຈາກແຜ່ນດິນ
ໂລກ. [15]ພຣະອົງຊົງເຮັດເຫລົ້າອະງຸ່ນເພື່ອເຮັດໃຫ້ມະນຸດມີຄວາມສຸກ, ຊົງປຣະທານນ້ຳມັນເພື່ອເຮັດໃຫ້ຫນ້າຂອງເຂົາສົດໃສ, ແລະຊົງປຣະທານ
ອາຫານເພື່ອໃຫ້ພວກເຂົາມີເຫື່ອແຮງຂຶ້ນໃຫມ່.
[16]ສ່ວນຕົ້ນໄມ້ຂອງພຣະຢາເວ ໄດ້ຮັບຝົນຢ່າງຫລວງຫລາຍ; ຄືຕົ້ນແປກແຫ່ງເລບານອນຊຶ່ງພຣະອົງໄດ້ຊົງປູກໄວ້. [17]ເທິງຕົ້ນໄມ້ນັ້ນຝູງນົກໄດ້ສ້າງ
ຮັງຂອງພວກມັນຢູ່ໃນນັ້ນ. ນົກຍາງມີຕົ້ນສົນສາມໃບເປັນບ້ານຂອງມັນ. [18]ແບ້ປ່າກໍອາສັຍຢູ່ເທິງພູເຂົາສູງທັງຫລາຍ; ບັນດາທີ່ສູງຂອງຫນ້າຜາເປັນ
ທີ່ລີ້ພັຍຂອງໂຕກະຕ່າຍ.
[19]ພຣະອົງໄດ້ຊົງຕັ້ງດວງເດືອນໃຫ້ກຳນົດຣະດູການທັງຫລາຍ; ດວງຕາເວັນໃຫ້ຮູ້ຈັກເວລາຂອງມັນ. [20]ພຣະອົງຊົງສ້າງຄວາມມືດຂອງກາງຄືນໃຫ້
ເປັນເວລາທີ່ບັນດາສັດປ່າທັງຫມົດຂອງປ່າຈະໄດ້ອອກມາ.
[21]ສິງໂຕຫນຸ່ມແຜດສຽງຮ້ອງເວລາອອກຫາເຫຍື່ອຂອງມັນແລະຊອກຫາອາຫານຂອງມັນພຣະເຈົ້າຈັດໄວ້ໃຫ້. [22]ເມື່ອຕາເວັນຂຶ້ນ, ພວກມັນກໍພັກ
ຜ່ອນແລະນອນຫລັບໃນຖ້ຳທັງຫລາຍຂອງພວກມັນ.
[23]ໃນຂະນະດຽວກັນ, ມະນຸດທັງຫລາຍກໍອອກໄປເຮັດວຽກງານຂອງພວກເຂົາແລະອອກແຮງໄປຈົນເຖິງເວລາແລງ. [24]ຂ້າແດ່ພຣະຢາເວ, ພຣະ
ອົງໄດ້ສ້າງຫລາຍສິ່ງຫລາຍແນວ! ພຣະອົງໄດ້ສ້າງສັບພະທຸກສິ່ງ ພຣະອົງໄດ້ຊົງສ້າງທຸກສິ່ງເຫລົ່ານັ້ນດ້ວຍພຣະປັນຍາ; ແຜ່ນດິນໂລກເຕັມລົ້ນ
ໄປດ້ວຍສິ່ງທີ່ພຣະອົງໄດ້ສ້າງ.
[25]ທະເລຢູ່ຂ້າງນັ້ນ, ທັງເລິກແລະກວ້າງ, ຄັບຄັ່ງໄປດ້ວຍສິ່ງທີ່ມີຊີວິດຈົນນັບບໍ່ຖ້ວນ, ທັງສັດນ້ອຍແລະໃຫຍ່. [26]ເຮືອກໍແລ່ນໄປມາທີ່ນັ້ນ, ແລະເງືອກ
ກໍຢູ່ທີ່ນັ້ນ, ຊຶ່ງພຣະອົງໄດ້ຊົງສ້າງໄວ້ໃຫ້ລອຍຫລິ້ນໃນທະເລ.
[27]ສິ່ງທັງຫມົດນີ້ຫລຽວຫາພຣະອົງເພື່ອໃຫ້ພຣະອົງຊົງປຣະທານອາຫານແກ່ພວກມັນຕາມເວລາ. [28]ເມື່ອພຣະອົງຊົງປຣະທານໃຫ້ແກ່ພວກມັນ
ພວກ ພວກມັນກໍມາຮວມກັນ, ເມື່ອພຣະອົງຊົງກາງມືອອກ; ພວກມັນກໍໄດ້ອີ່ມທ້ອງ.
[29]ເມື່ອພຣະອົງຊົງລີ້ຫນ້າຂອງພຣະອົງ, ພວກມັນກໍລຳບາກ; ຖ້າພຣະອົງຊົງເອົາລົມຫາຍໃຈພວກມັນໄປ, ພວກມັນກໍຕາຍແລະກັບເປັນຝຸ່ນດິນ.
[30]ເມື່ອພຣະອົງຊົງສົ່ງພຣະວິນຍານຂອງພຣະອົງອອກໄປ, ພວກມັນກໍຖືກສ້າງຂຶ້ນ, ແລະພຣະອົງກໍຊົງປ່ຽນໂສມຫນ້າຂອງແຜ່ນດິນໂລກຄືນໃຫມ່.
[31]ຂໍໃຫ້ສະຫງ່າຣາສີຂອງພຣະຢາເວດຳຣົງຢູ່ເປັນນິດ; ຂໍໃຫ້ພຣະຢາເວຊົງປິຕິຍິນດີໃນການຊົງສ້າງຂອງພຣະອົງ. [32]ພຣະອົງແນມລົງມາຍັງແຜ່ນ
ດິນໂລກ, ແລະມັນກໍສັ່ນສະເທືອນ; ພຣະອົງຊົງແຕະຕ້ອງພູເຂົາ ແລະພວກມັນກໍມີຄວັນໄຟພົ່ງຂຶ້ນມາໂລດ.
[33]ຂ້ານ້ອຍຈະຮ້ອງເພງຖວາຍແດ່ພຣະຢາເວດ້ວຍສິ້ນສຸດຊີວິດຂອງຂ້ານ້ອຍ; ຂ້ານ້ອຍຈະຮ້ອງເພງຖວາຍແດ່ພຣະເຈົ້າຂອງຂ້ານ້ອຍຕາບເທົ່າທີ່
ຂ້ານ້ອຍຍັງມີຊີວິດຢູ່. [34]ຂໍໃຫ້ບົດເພງນັ້ນຈົ່ງເປັນທີ່ພໍໃຈພຣະອົງ; ຂ້ານ້ອຍຊົມຊື່ນຍິນດີໃນພຣະຢາເວ.
[35]ຂໍໃຫ້ບັນດາຄົນບາບສູນສິ້ນໄປຈາກແຜ່ນດິນໂລກ, ແລະຂໍຢ່າໃຫ້ມີຄົນຊົ່ວອີກເລີຍ. ຂ້ານ້ອຍຂໍຖວາຍສັນຣະເສີນແດ່ພຣະຢາເວ. ດ້ວຍສິ້ນສຸດ
ໃຈຂອງຂ້ານ້ອຍ ຈົ່ງສັນຣະເສີນພຣະຢາເວເຖີດ.

 generated on Tue Jun 17 19:01:42 2025

105 1ຈົ່ງຖວາຍຂອບພຣະຄຸນແດ່ພຣະຢາເວ, ຈົ່ງປະກາດພຣະນາມຊື່ຂອງພຣະອົງ; ຈົ່ງໃຫ້ສິ່ງທີ່ພຣະອົງໄດ້ກະທຳໄດ້ເປັນທີ່ຮູ້ຈັກໃນທ່າມກາງ
ຊົນຊາດທັງຫລາຍ. 2ຈົ່ງຮ້ອງເພງຖວາຍແດ່ພຣະອົງ; ຈົ່ງຮ້ອງເພງສັນຣະເສີນຖວາຍແດ່ພຣະອົງ ຈົ່ງເລົ່າເຖິງການກະທຳອັນອັສະຈັນທັງ
ຫມົດຂອງພຣະອົງ. 3ຈົ່ງອວດພຣະນາມຊື່ບໍຣິສຸດຂອງພຣະອົງ; ໃຫ້ໃຈຂອງທຸກຄົນທີ່ສະແຫວງຫາພຣະຢາເວຊື່ນບານ.

4ຈົ່ງສະແຫວງຫາພຣະຢາເວ; ແລະກຳລັງຂອງພຣະອົງ. ຈົ່ງສະແຫວງຫາພຣະພັກຂອງພຣະອົງຢູ່ສະເຫມີ. 5ຈົ່ງຣະນຶກເຖິງບັນດາສິ່ງທີ່ຫນ້າຢ້ານ
ກົວຊຶ່ງພຣະອົງໄດ້ຊົງກະທຳໄວ້, ບັນດາການອັສະຈັນຂອງພຣະອົງ, ແລະບັນດາຄຳພິພາກສາຈາກພຣະໂອດຂອງພຣະອົງ, 6ທ່ານຜູ້ເປັນເຊື້ອສາຍ
ທັງຫລາຍຂອງອັບຣາຮາມຜູ້ຮັບໃຊ້ຂອງພຣະອົງເອີຍ, ທ່ານຜູ້ເປັນປະຊາກອນຂອງຢາໂຄບ, ບັນດາຜູ້ທີ່ພຣະອົງຊົງເລືອກໄວ້.
7ພຣະອົງຄືພຣະຢາເວພຣະເຈົ້າຂອງເຮົາ ຄືຂໍ້ຄຳສັ່ງຂອງພຣະອົງໃຊ້ກັນຢູ່ທົ່ວທັງແຜ່ນດິນໂລກ. 8ພຣະອົງຊົງຣະນຶກເຖິງພັນທະສັນຍາຂອງພຣະ
ອົງຢູ່ເປັນນິດ, ຄືເປັນພຣະສັນຍາທີ່ພຣະອົງຊົງມີໄວ້ຫລາຍຊົ່ວພັນເຊັ່ນຄົນ.
9ພຣະອົງຊົງຣະນຶກເຖິງຄຳສັນຍາຊຶ່ງພຣະອົງໄດ້ຊົງເຮັດໄວ້ກັບອັບຣາຮາມ ແລະຄຳສັນຍາພຣະອົງກັບອີຊາກ. 10ນີ້ຄືສິ່ງທີ່ພຣະອົງໄດ້ຊົງຢືນຢັນ
ກັບຢາໂຄບ ໃຫ້ເປັນກົດບັນຍັດ ແລະກັບອິສະຣາເອນໃຫ້ເປັນຄຳສັນຍານິຣັນ. 11ພຣະອົງໄດ້ກ່າວວ່າ, “ເຮົາຈະໃຫ້ແຜ່ນດິນການາອານແກ່ເຈົ້າ
ໃຫ້ເປັນສ່ວນແບ່ງແຫ່ງມໍຣະດົກຂອງເຈົ້າທັງຫລາຍ."
12ພຣະອົງໄດ້ກ່າວເລື່ອງນີ້ເມື່ອພວກເຂົາຍັງມີພຽງຈຳນວນນ້ອຍ, ພຽງເລັກນ້ອຍ, ແລະຍັງເປັນພວກຄົນແປກຫນ້າໃນແຜ່ນດິນນັ້ນ. 13ພວກເຂົາໄດ້
ທ່ອງທ່ຽວຈາກຊົນຊາດຫນຶ່ງໄປຍັງອີກຊົນຊາດຫນຶ່ງ ແລະຈາກອານາຈັກຫນຶ່ງໄປຍັງອີກອານາຈັກຫນຶ່ງ.
14ພຣະອົງບໍ່ຊົງຍອມໃຫ້ຜູ້ໃດບີບບັງຄັບພວກເຂົາ; ພຣະອົງຊົງເຕືອນກະສັດທັງຫລາຍເພື່ອເຫັນແກ່ພວກເຂົາ. 15ພຣະອົງໄດ້ກ່າວວ່າ,“ຢ່າແຕະ
ຕ້ອງບັນດາຜູ້ທີ່ເຮົາເຈີມໄວ້, ແລະຢ່າເຮັດອັນຕະຣາຍບັນດາຜູ້ເຜີຍຂໍ້ຄຳສັ່ງຂອງເຮົາ.”
16ພຣະອົງໄດ້ສັ່ງການອຶດຢາກອາຫານໃຫ້ເກີດຂຶ້ນເທິງແຜ່ນດິນ ພຣະອົງຊົງທຳລາຍແຫລ່ງສະບຽງອາຫານທັງຫມົດ. 17ພຣະອົງໄດ້ຊົງໃຊ້ຊາຍຄົ
ນຫນຶ່ງໄປຂ້າງຫນ້າພວກເຂົາ ໂຢເຊບໄດ້ຖືກຂາຍໄປເປັນທາດຮັບໃຊ້.
18ຕີນທັງຄູ່ຂອງເຂົາຖືກມັດດ້ວຍໂສ້; ຄໍຂອງເຂົາຖືກໃສ່ປອກເຫລັກ, 19ຈົນກວ່າຈະເຖິງເວລາ,ສິ່ງທີ່ເພິ່ນໄດ້ທຳນວາຍໄດ້ກາຍເປັນຈິງ,
ແລະຖ້ອຍຄຳຂອງພຣະຢາເວໄດ້ຊົງພິສູດເຂົາວ່າຖືກຕ້ອງ.
20ກະສັດກໍຊົງໃຫ້ບັນດາຜູ້ຮັບໃຊ້ໄປປ່ອຍໂຕເຂົາ; ຜູ້ປົກຄອງຂອງປະຊາຊົນກໍປ່ອຍເຂົາເປັນອິສຣະ. 21ເພິ່ນໄດ້ຊົງຖືກແຕ່ງຕັ້ງໃຫ້ດູແລພະຣາຊະວັງ
ຂອງພະອົງໃນຖານະຜູ້ປົກຄອງ ດູແລບັນດາຊັບສິນຂອງພະອົງທັງຫມົດ. 22ໃຫ້ສັ່ງສອນບັນດາເຈົ້ານາຍຂອງພະອົງຕາມທີ່ກະສັດຊົງປະສົງ ແລະ
ສອນປັນຍາໃຫ້ແກ່ບັນດາຜູ້ອາວຸໂສຂອງພະອົງ. 23ແລ້ວອິສະຣາເອນໄດ້ເຂົ້າມາສູ່ເອຢິບ, ແລະຢາໂຄບໄດ້ອາສັຍຢູ່ໃນແຜ່ນດິນຂອງຮາມຊົ່ວໄລ
ຍະຫນຶ່ງ.
24ພຣະຢາເວໄດ້ຊົງເຮັດໃຫ້ປະຊາຊົນຂອງພຣະອົງ, ມີລູກຫລາຍ ແລະໄດ້ຊົງເຮັດໃຫ້ພວກເຂົາແຂງແກ່ນກວ່າສັດຕຣູຂອງພວກເຂົາ. 25ພຣະອົງ
ໄດ້ຊົງເຮັດໃຫ້ສັດຕຣູຂອງພວກເຂົາກຽດຊັງປະຊາຊົນຂອງພຣະອົງ, ເພື່ອຂົ່ມເຫັງຜູ້ຮັບໃຊ້ຂອງພຣະອົງ. 26ພຣະອົງໄດ້ຊົງໃຊ້ໂມເຊຜູ້ຮັບໃຊ້ຂອງ
ພຣະອົງ, ແລະອາໂຣນຜູ້ທີ່ພຣະອົງໄດ້ຊົງເລືອກໄວ້. 27ເຂົາທັງສອງໄດ້ສຳແດງບັນດາຫມາຍສຳຄັນຂອງພຣະອົງທ່າມກາງຄົນເອຢິບ, ສຳແດງການ
ອັສະຈັນຂອງພຣະອົງໃນແຜ່ນດິນຂອງຮາມ.
28ພຣະອົງໄດ້ຊົງໃຊ້ຄວາມມືດມາແລະໄດ້ຊົງເຮັດໃຫ້ແຜ່ນດິນມືດ, ແຕ່ປະຊາຊົນຂອງແຜ່ນດິນນັ້ນບໍ່ໄດ້ເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ. 29ພຣະອົງ
ໄດ້ຊົງເຮັດໃຫ້ນ້ຳກາຍເປັນເລືອດ ແລະໄດ້ຊົງຂ້າປາຂອງພວກເຂົາຕາຍຫມົດ. 30ແຜ່ນດິນຂອງພວກເຂົາເຕັມໄປດ້ວຍກົບຫລວງຫລາຍແມ່ນແຕ່
ໃນຫ້ອງຕ່າງໆ, ຂອງບັນດາຜູ້ປົກຄອງຂອງພວກເຂົາ.
31ພຣະອົງໄດ້ສັ່ງ, ໃຫ້ຝູງເຫລືອກກໍມາແລະຝູງຮິ້ນໄດ້ເຂົ້າມາເຕັມໄປທົ່ວເຂດແດນຂອງພວກເຂົາ. 32ພຣະອົງໄດ້ຊົງປ່ຽນຝົນໃຫ້ກາຍເປັນລູກເຫັບ
ແກ່ພວກເຂົາ, ດ້ວຍແປວໄຟເທິງແຜ່ນດິນຂອງພວກເຂົາ. 33ພຣະອົງໄດ້ຊົງທຳລາຍເຄືອອະງຸ່ນແລະຕົ້ນເດື່ອເທດຂອງພວກເຂົາ; ພຣະອົງໄດ້ຊົງຕັດ
ຕົ້ນໄມ້ທັງຫລາຍໃນເຂດແດນຂອງພວກເຂົາ.
34ພຣະອົງໄດ້ກ່າວ, ແລະຕັກແຕນທັງຫລາຍກໍມາ, ມີຕັກແຕນຫລວງຫລາຍ. 35ພວກຕັກແຕນໄດ້ມາກິນພືດຜັກໃນແຜ່ນດິນຂອງພວກເຂົາຈົນ
ຫມົດ; ພວກມັນໄດ້ກິນພືດຜົນແຫ່ງພື້ນດິນຂອງພວກເຂົາຈົນຫມົດ. 36ພຣະອົງໄດ້ຂ້າລູກຊາຍກົກທັງຫລາຍໃນແຜ່ນດິນຂອງພວກເຂົາ, ຄືບັນດາ
ຜົນແຮກແຫ່ງກຳລັງທັງຫມົດຂອງພວກເຂົາ.
37ແລ້ວພຣະອົງໄດ້ຊົງນຳຄົນອິສະຣາເອນອອກໄປພ້ອມກັບເງິນແລະທອງຄຳ; ບໍ່ມີຈັກຄົນຫນຶ່ງໃນເຜົ່າຂອງພຣະອົງສະດຸດຕາມທາງ. 38ເອຢິບໄດ້
ຍິນດີເມື່ອເຂົາທັງຫລາຍຈາກໄປ, ເພາະຄົນເອຢິບຕ່າງຢ້ານກົວພວກເຂົາ. 39ພຣະອົງໄດ້ກາງເມກເປັນເຄື່ອງກຳບັງ ປະຊາຊົນຂອງພຣະອົງ ແລະ
ໄດ້ຊົງໃຫ້ໄຟສ່ອງສະຫວ່າງເວລາກາງຄືນ.
40ເມື່ອບັນດາຄົນອິສະຣາເອນໄດ້ຮ້ອງຂໍອາຫານ ແລະພຣະອົງໄດ້ຊົງນຳນົກຂຸ້ມມາແລະໄດ້ໃຫ້ພວກເຂົາອີ່ມດ້ວຍອາຫານຈາກຟ້າ. 41ພຣະອົງຊົງ
ແຍກຫີນ, ແລະນ້ຳທັງຫລາຍກໍໄດ້ໄຫລອອກມາຈາກຫີນ; ນ້ຳນັ້ນໄດ້ໄຫລໄປໃນຖິ່ນແຫ້ງແລ້ງກັນດານດັ່ງແມ່ນ້ຳ. 42ເພາະພຣະອົງໄດ້ຊົງຣະນຶກ
ເຖິງພຣະສັນຍາອັນສັກສິດຂອງພຣະອົງທີ່ໄດ້ຊົງກະທຳໄວ້ກັບອັບຣາຮາມຜູ້ຮັບໃຊ້ຂອງພຣະອົງ.
43ພຣະອົງໄດ້ຊົງນຳປະຊາຊົນຂອງພຣະອົງອອກມາດ້ວຍຄວາມຊື່ນບານ, ໄດ້ນຳຜູ້ທີ່ຊົງເລືອກໄວ້ດ້ວຍສຽງໂຫ່ຮ້ອງແຫ່ງຊັຍຊະນະ. 44ພຣະອົງໄດ້
ປຣະທານແຜ່ນດິນທັງຫລາຍຂອງປະຊາຊົນຊາດອື່ນໃຫ້ແກ່ພວກເຂົາ ພວກເຂົາໄດ້ຖືກຳມະສິດແຫ່ງຄວາມຮັ່ງມີຂອງຊົນຊາດທັງຫລາຍ 45ເພື່ອ
ພວກເຂົາຈະປະຕິບັດຕາມກົດບັນຍັດຂອງພຣະອົງ ແລະເຊື່ອຟັງເຮັດຕາມຂໍ້ຄຳສັ່ງຂອງພຣະອົງ ຈົ່ງສັນຣະເສີນພຣະຢາເວເຖີດ.

 generated on Tue Jun 17 19:01:42 2025

106 1ຈົ່ງສັນຣະເສີນພຣະຢາເວ, ຈົ່ງຖວາຍຂອບພຣະຄຸນແດ່ພຣະຢາເວ, ເພາະພຣະອົງຊົງປະເສີດ, ເພາະຄວາມຊື່ສັດແຫ່ງພັນທະສັນຍາ
ຂອງພຣະອົງດຳຣົງເປັນນິດ.2ຜູ້ໃດສາມາດພັນລະນາເຖິງການກະທຳອັນຊົງຣິທານຸພາບຂອງພຣະຢາເວ ຫລືປະກາດເຖິງການກະທຳທີ່
ສົມຄວນໄດ້ຮັບການສັນຣະເສີນຂອງພຣະອົງໄດ້ຄົບຖ້ວນ?.

3ຜູ້ທີ່ເຮັດໃນສິ່ງທີ່ຖືກຕ້ອງ, ແລະການກະທຳຂອງເຂົາທ່ຽງທັມຢູ່ສະເໝີກໍເປັນສຸກ.4ຂ້າແດ່ພຣະຢາເວ, ຂໍຊົງຣະນຶກເຖິງຂ້ານ້ອຍ, ເມື່ອ ພຣະອົງ
ຊົງສຳແດງຄວາມເມດຕາແກ່ປະຊາຊົນຂອງພຣະອົງ; ຂໍຊົງຊ່ວຍຂ້ານ້ອຍເມື່ອພຣະອົງຊົງຊ່ວຍພວກເຂົາໃຫ້ພົ້ນ.5ແລ້ວຂ້ານ້ອຍຈະເຫັນຄວາມ
ຈະເຣີນຮຸ່ງເຮືອງຂອງຜູ້ທີ່ໄດ້ຮັບການຊົງເລືອກຂອງພຣະອົງ, ແລະຈະຊື່ນບານໃນຄວາມຍິນດີແຫ່ງຊົນຊາດຂອງພຣະອົງ, ແລະມີກຽດຮ່ວມກັບ
ມໍຣະດົກຂອງພຣະອົງ.
6ພວກຂ້ານ້ອຍໄດ້ເຮັດບາບຄືຢ່າງພວກບັນພະບຸຣຸດຂອງພວກຂ້ານ້ອຍ ແລະໄດ້ກະທຳຜິດ; ແລະໄດ້ປະພຶດຢ່າງຊົ່ວຮ້າຍ.7ບັນພະບຸຣຸດຂອງ
ພວກຂ້ານ້ອຍບໍ່ໄດ້ຊື່ນຊົມໃນພຣະຣາຊກິດອັນຍິ່ງໃຫຍ່ຂອງພຣະອົງໃນອີຢິບ; ພວກເຂົາບໍ່ໄດ້ສົນໃຈຕໍ່ການກະທຳຫລວງຫລາຍແຫ່ງຄວາມຊື່ສັດ
ແຫ່ງຄຳສັນຍາຂອງພຣະອົງ; ພວກເຂົາໄດ້ກະບົດທີ່ທະເລ, ທີ່ທະເລແດງ.
8ເຖິງປານນັ້ນກໍຕາມ, ພຣະອົງໄດ້ຊົງຊ່ວຍພວກເຂົາໃຫ້ພົ້ນເພື່ອເຫັນແກ່ພຣະນາມຊື່ຂອງພຣະອົງ ເພື່ອພຣະອົງຈະໄດ້ສຳແດງຣິທານຸພາບຂອງພ
ຣະອົງ.9ພຣະອົງໄດ້ຊົງນາບຂູ່ທະເລແດງ, ແລະມັນກໍແຫ້ງໄປ ແລ້ວ ພຣະອົງໄດ້ນຳພວກເຂົາຂ້າມຜ່ານທີ່ເລິກ, ເໝືອນຢ່າງກັບຍ່າງຂ້າມຖິ່ນ
ທຸຣະກັນດານ.
10ພຣະອົງໄດ້ຊ່ວຍພວກເຂົາຈາກມືຂອງຄົນທີ່ກຽດຊັງພວກເຂົາ, ແລະພຣະອົງໄດ້ຊົງຊ່ວຍກູ້ພວກເຂົາຈາກມືຂອງສັດຕຣູ.11ແລະນ້ຳໄດ້ຖ້ວມພວກ
ສັດຕຣູຂອງພວກເຂົາ ບໍ່ມີພວກຄົນເຫລົ່ານັ້ນຈັກຄົນດຽວໄດ້ລອດຊີວິດເລີຍ.12ແລ້ວພວກເຂົາກໍໄດ້ເຊື່ອຖ້ອຍຄຳຂອງພຣະອົງ, ແລະພວກເຂົາໄດ້
ຮ້ອງເພງສັນຣະເສີນພຣະອົງ.
13ແຕ່ພວກເຂົາໄດ້ລືມສິ່ງທີ່ພຣະອົງໄດ້ຊົງກະທຳໄວ້ຢ່າງໄວ; ພວກເຂົາບໍ່ໄດ້ລໍຖ້າຄຳສັ່ງຂອງພຣະອົງ.14ພວກເຂົາໄດ້ເກີດຄວາມຢາກຢ່າງຮຸນແຮງ
ໃນຖິ່ນແຫ້ງແລ້ງກັນດານ, ແລະພວກເຂົາໄດ້ທ້າທາຍພຣະເຈົ້າໃນທີ່ແຫ້ງແລ້ງ.15ພຣະອົງໄດ້ຊົງປະທານໃຫ້ແກ່ພວກເຂົາຕາມຄຳຂໍຂອງພວກ
ເຂົາ, ແຕ່ໄດ້ຊົງສົ່ງໂຣກພັຍທີ່ກັດກິນຮ່າງກາຍຂອງພວກເຂົາ.
16ພວກເຂົາກໍໄດ້ອິດສາໂມເຊແລະອາໂຣນ, ຜູ້ເປັນປະໂລຫິດບໍຣິສຸດຂອງພຣະຢາເວ.17ແລະໄດ້ຖົມອາບີຣາມກັບຄອບຄົວຂອງພວກເຂົາດ້ວຍ.
18ໄຟໄດ້ລຸກໄໝ້ທ່າມກາງພວກເຂົາ; ໄຟໄດ້ເຜົາຜານຄົນຊົ່ວເສຍ.
19ພວກເຂົາໄດ້ສ້າງຮູບງົວທີ່ໂຮເຣັບ ແລະໄດ້ນະມັສະການຮູບໂລຫະທີ່ໄດ້ຫລໍ່ຂຶ້ນ.20ພວກເຂົາໄດ້ເອົາພຣະສີຣິຂອງພຣະເຈົ້າ ໄປແລກກັບຮູບປັ້ນ
ຂອງງົວທີ່ກິນຫຍ້າ.21ພວກເຂົາໄດ້ລືມພຣະເຈົ້າ, ຜູ້ຊົງຊ່ວຍພວກເຂົາໃຫ້ພົ້ນ ຜູ້ໄດ້ຊົງເຮັດການກະທຳໃຫຍ່ຍິ່ງໃນເອຢິບ.
22ພຣະອົງໄດ້ທຳການອັສະຈັນຕ່າງໆ ໃນແຜ່ນດິນຂອງຮາມ ແລະກິຈະການອັນຊົງຣິດທານຸພາບທີ່ທະເລແດງ.23ພຣະອົງໄດ້ບັນຊາຄວາມພິນາດ
ຂອງພວກເຂົາ, ຖ້າບໍ່ແມ່ນເພາະໂມເຊ ຜູ້ໄດ້ຮັບການເລືອກຂອງພຣະອົງ ໄດ້ມາຢືນແທກລະຫວ່າງພຣະອົງກັບຄວາມຜິດນັ້ນເພື່ອຫັນຄວາມໂກດ
ຮ້າຍຂອງພຣະອົງໄປເສຍຈາກການທຳລາຍພວກເຂົາ.
24ຕໍ່ມາພວກເຂົາໄດ້ຖືກແຜ່ນດິນທີ່ເຕັມໄປດ້ວຍພືດຜົນ; ພວກເຂົາບໍ່ໄດ້ເຊື່ອຄຳສັນຍາຂອງພຣະອົງ.25ແຕ່ໄດ້ຈົ່ມວ່າຢູ່ໃນເຕັນຂອງພວກເຂົາ, ແລະ
ບໍ່ຍອມເຊື່ອຟັງສຽງຂອງພຣະຢາເວ.
26ເພາະສະນັ້ນ ພຣະອົງໄດ້ຊົງຍົກມືຂອງພຣະອົງຂຶ້ນແລະໄດ້ຊົງເຕືອນພວກເຂົາວ່າ ພຣະອົງຈະປ່ອຍໃຫ້ພວກເຂົາຕາຍໃນຖິ່ນແຫ້ງ
ແລ້ງກັນດານນັ້ນ,27ໃຫ້ເຊື້ອສາຍຂອງພວກເຂົາກະແຈກກະຈາຍໄປທ່າມກາງປະຊາຊາດ, ແລະໃຫ້ພວກເຂົາກະແຈກກະຈາຍໄປໃນແຜ່ນດິນ
ຂອງຄົນຕ່າງດ້າວ.
28ພວກເຂົາໄດ້ນະມັສການພະບາອານແຫ່ງເມືອງເປອໍ ແລະໄດ້ເຄື່ອງຖວາຍບູຊາທີ່ໄດ້ຖວາຍໃຫ້ແກ່ຄົນຕາຍ.29ພວກເຂົາໄດ້ເຮັດໃຫ້ພຣະອົງໂກດ
ຮ້າຍດ້ວຍການກະທຳຂອງພວກເຂົາ ແລະໂຣກຣະບາດກໍໄດ້ເກີດຂຶ້ນທ່າມກາງພວກເຂົາ.
30ແລ້ວຟີເນຫັດໄດ້ຢືນຂຶ້ນຂວາງ, ແລະໂຣກຣະບາດນັ້ນກໍຢຸດ.31ຊຶ່ງໄດ້ຖືວ່າເປັນການກະທຳຊອບທັມຂອງເຂົາຕໍ່ທຸກຊົ່ວເຊື້ອຊາດເປັນນິດ.
32ພວກເຂົາໄດ້ເຮັດໃຫ້ພຣະຢາເວ, ໂກດຮ້າຍທີ່ບໍ່ນ້ຳແຫ່ງເມຣິບາດ້ວຍ, ແລະໂມເຊໄດ້ທົນທຸກທໍຣະມານເພາະພວກເຂົາ.33ພວກເຂົາໄດ້ເຮັດໃຫ້
ໂມເຊຂົມຂື່ນ, ແລະໂມເຊຈຶ່ງໄດ້ເວົ້າຖ້ອຍຄຳບໍ່ທັນຄຶດສາກ່ອນ.34ພວກເຂົາບໍ່ໄດ້ທຳລາຍຊົນຊາດທັງຫລາຍຕາມທີ່ພຣະຢາເວ ໄດ້ຊົງສັ່ງພວກເຂົາ
ໄວ້,35ແຕ່ພວກເຂົາໄດ້ໂອ້ລົມກັບຊົນຊາດຕ່າງໆ ແລະໄດ້ຮຽນຮູ້ວິທີທາງຂອງຄົນເຫລົ່ານັ້ນ36ແລະໄດ້ນະມັສະການບັນດາຮູບເຄົາຣົບຂອງພວກຄົນ
ເຫລົ່ານັ້ນ, ຊຶ່ງໄດ້ກາຍເປັນບ້ວງແຮ້ວສຳຫລັບພວກເຂົາ.
37ພວກເຂົາໄດ້ເອົາລູກຊາຍແລະລູກສາວຂອງພວກເຂົາໄປຖວາຍບູຊາໃຫ້ແກ່ຮູບປັ້ນ.38ພວກເຂົາໄດ້ຫລັ່ງເລືອດຂອງຄົນທີ່ບໍ່ມີຄວາມຜິດ, ຄືເລືອດ
ຂອງລູກຊາຍແລະລູກສາວຂອງພວກເຂົາ, ຜູ້ຊຶ່ງພວກເຂົາໄດ້ຖວາຍບູຊາໃຫ້ແກ່ຮູບເຄົາຣົບແຫ່ງການາອານເຮັດໃຫ້ແຜ່ນດິນເປັນມົນທິນໄປ
ດ້ວຍເລືອດ.39ພວກເຂົາໄດ້ເປັນມົນທິນໂດຍການກະທຳຂອງພວກເຂົາ ໃນການກະທຳຂອງພວກເຂົາ; ພວກເຂົາເປັນຄືພວກຍິງໂສເພນີ.
40ດັ່ງນັ້ນພຣະຢາເວ ໄດ້ໂກດຮ້າຍປະຊາຊົນຂອງພຣະອົງ, ແລະພຣະອົງໄດ້ຊົງກຽດຊັງປະຊາກອນຂອງພຣະອົງເອງ.41ພຣະອົງໄດ້ມອບພວກເຂົາ
ໄວ້ໃນມືບັນດາປະຊາຊາດ, ແລະຜູ້ທີ່ກຽດຊັງພວກເຂົາໄດ້ປົກຄອງເໜືອພວກເຂົາ.
42ພວກສັດຕຣູຂອງພວກເຂົາໄດ້ບີບບັງຄັບພວກເຂົາ, ແລະພວກເຂົາໄດ້ຕົກຢູ່ພາຍໃຕ້ການຄວບຄຸມຂອງຜູ້ທີ່ມີອຳນາດເໜືອພວກເຂົາ.43ພຣະອົງ
ໄດ້ມາຊ່ວຍພວກເຂົາຫລາຍຄັ້ງ, ແຕ່ພວກເຂົາຍັງຄົງກະບົດແລະໄດ້ຖືກນຳໃຫ້ຕົກຕໍ່າໂດຍຄວາມບາບຂອງພວກເຂົາເອງ.
44ເຖິງຢ່າງໃດກໍຕາມ, ພຣະອົງໄດ້ຊົງສົນໃຈຕໍ່ຄວາມທຸກໃຈຂອງພວກເຂົາ ເມື່ອພຣະອົງຟັງສຽງຮ້ອງທູນຄວາມຊ່ວຍເຫລືອຂອງພວກເຂົາ.45ພຣະ
ອົງໄດ້ຊົງຣະນຶກເຖິງພັນທະສັນຍາຂອງພຣະອົງ ທີ່ມີກັບພວກເຂົາ ແລະໄດ້ເມດຕາເພາະຄວາມຮັກຫມັ້ນຄົງຂອງພຣະອົງ.46ພຣະອົງໄດ້ເຮັດໃຫ້ຜູ້
ທີ່ມີຊັຍຊະນະເໜືອພວກເຂົາໄດ້ເມດຕາພວກເຂົາ.
47ຂ້າແດ່ພຣະຢາເວ, ພຣະເຈົ້າ, ຂອງພວກຂ້ານ້ອຍ ຂໍຊົງຊ່ວຍພວກຂ້ານ້ອຍໃຫ້ພົ້ນ ແລະຂໍຊົງຮວບຮວມພວກຂ້ານ້ອຍຈາກທ່າມກາງປະຊາຊົນ
ຕ່າງໆ ເພື່ອຂ້ານ້ອຍທັງຫລາຍຈະໄດ້ຖວາຍຂອບພຣະຄຸນແດ່ພຣະນາມຊື່ບໍຣິສຸດຂອງພຣະອົງ ແລະຖວາຍພຣະສີຣິໃນບັນດາຄຳສັນຣະເສີນ
ຂອງພຣະອົງ.48ຂໍໃຫ້ພຣະຢາເວພຣະເຈົ້າ, ຂອງອິສະຣາເອນ, ໄດ້ຮັບການສັນຣະເສີນຈາກນິຣັນການຈົນເຖິງນິຣັນການ. ຂໍໃຫ້ປະຊາຊົນທັງ
ຫມົດກ່າວວ່າ “ອາແມນ” ຈົ່ງສັນຣະເສີນພຣະຢາເວເຖີດ, ເຫລັ້ມທີຫ້າ.


generated on Tue Jun 17 19:01:42 2025

107 [1]ຈົ່ງຖວາຍຂອບພຣະຄຸນແດ່ພຣະຢາເວ, ເພາະພຣະອົງຊົງປະເສີດ, ແລະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງດຳຣົງເປັນນິດ.[2]ໃຫ້ຜູ້
ທີ່ໄດ້ຮັບການໄຖ່ຂອງພຣະຢາເວ, ກ່າວອອກມາ ຄືຜູ້ທີ່ໄດ້ຮັບການຊ່ວຍກູ້ຈາກມືຂອງສັດຕຣູ.[3]ພຣະອົງໄດ້ຊົງຮວບຮວມພວກເຂົາອອກມາ
ຈາກແຜ່ນດິນຂອງຄົນຕ່າງດ້າວ, ຈາກທິດຕາເວັນອອກແລະຈາກທິດຕາເວັນຕົກ, ຈາກທິດເຫນືອແລະຈາກທິດໃຕ້.

[4]ພວກເຂົາໄດ້ເລາະໄປໃນຖິ່ນແຫ້ງແລ້ງກັນດານເທິງຫົນທາງໃນທີ່ປ່ຽວ ແລະຫາບໍ່ພົບທາງທີ່ຈະເຂົ້າໄປໃນເມືອງນັ້ນໄດ້.[5]ພວກເຂົາໄດ້ພາກັນ
ຫິວເຂົ້າແລະກະຫາຍນ້ຳ, ພວກເຂົາໄດ້ຫມົດແຮງຈາກຄວາມອ່ອນລ້າ.[6]ແລ້ວພວກເຂົາໄດ້ຮ້ອງຫາພຣະຢາເວ, ທ່າມກາງຄວາມທຸກຍາກຂອງ
ພວກເຂົາ ແລະພຣະອົງໄດ້ຊົງຊ່ວຍກູ້ພວກເຂົາໃຫ້ພົ້ນຈາກຄວາມທຸກໃຈຂອງພວກເຂົາ.[7]ພຣະອົງໄດ້ຊົງນຳພວກເຂົາໄປໃນທາງຊື່ເພື່ອພວກເຂົາ
ຈະໄດ້ໄປເຖິງເມືອງທີ່ຈະເຂົ້າອາສັຍໄດ້.
[8]ໂອ ປະຊານເຫລົ່ານັ້ນຄວນສັນຣະເສີນພຣະຢາເວ, ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ແລະເພາະສິ່ງອັສະຈັນຕ່າງໆທີ່ພຣະອົງໄດ້
ຊົງກະທຳໄວ້ເພື່ອມະນຸດທັງຫລາຍ.[9]ເພາະພຣະອົງໃຫ້ຄວາມປຣາຖນາຂອງຜູ້ທີ່ຫິວນ້ຳໄດ້ອີ່ມພໍໃຈ ແລະຄວາມປຣາຖນາຂອງຜູ້ທີ່ຫິວເຂົ້າ ພຣະ
ອົງໄດ້ຊົງເຕີມໃຫ້ເຕັມດ້ວຍສິ່ງດີ.[10]ບາງຄົນກໍໄດ້ນັ່ງຢູ່ໃນຄວາມມືດແລະເສົ້າໂສກ ຄືພວກນັກໂທດທີ່ຢູ່ໃນຄວາມທຸກຍາກແລະຖືກລ່າມໂສ້.
[11]ນີ້ເປັນເພາະພວກເຂົາໄດ້ກະບົດຕໍ່ຄຳສັ່ງຂອງພຣະເຈົ້າ, ແລະປະຕິເສດຖ້ອຍຄຳຂອງພຣະອົງຜູ້ສູງສຸດ.[12]ພຣະອົງໄດ້ເຮັດໃຫ້ໃຈຂອງເຂົາທັງ
ຫລາຍຖ່ອມລົງດ້ວຍຄວາມທຸກຍາກລຳບາກ ພວກເຂົາໄດ້ສະດຸດແລະບໍ່ມີໃຜຊ່ວຍໃຫ້ພວກເຂົາລຸກຂຶ້ນ[13]ແລ້ວພວກເຂົາໄດ້ຮ້ອງຫາພຣະຢາເວ,
ໃນຍາມຍາກລຳບາກ ແລະພຣະອົງໄດ້ຊົງພາພວກເຂົາອອກຈາກຄວາມທຸກໂສກຂອງພວກເຂົາ.
[14]ພຣະອົງໄດ້ຊົງນຳພວກເຂົາອອກມາຈາກຄວາມມືດແລະຄວາມເສົ້າໂສກແລະໄດ້ຊົງຫັກໂສ້ທີ່ລ່າມພວກເຂົາໃຫ້ຂາດ.[15]ໂອ ປະຊາຊົນເຫລົ່ານັ້ນ
ຄວນສັນຣະເສີນພຣະຢາເວ, ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ແລະເພາະສິ່ງອັສະຈັນຕ່າງໆ ທີ່ພຣະອົງໄດ້ຊົງກະທຳໄວ້ເພື່ອມະນຸດທັງ
ຫລາຍ![16]ເພາະພຣະອົງໄດ້ມ້າງປະຕູເຮັດດ້ວຍທອງສຳຣິດແລະໄດ້ຕັດທ່ອນເຫລັກໃຫ້ຫມຸ່ນໄປ.
[17]ພວກເຂົາໄດ້ເປັນຄົນໂງ່ໃນທາງແຫ່ງການກະບົດຂອງພວກເຂົາ ແລະໄດ້ທຸກຍາກເພາະຄວາມຊົ່ວຂອງພວກເຂົາ.[18]ພວກເຂົາໄດ້ສູນເສຍຄວາມ
ປຣາຖນາທີ່ຈະກິນອາຫານໃດໆ, ແລະພວກເຂົາໄດ້ເຂົ້າມາໃກ້ປະຕູແຫ່ງຄວາມຕາຍ.[19]ແລ້ວພວກເຂົາໄດ້ຮ້ອງຫາພຣະຢາເວ, ໃນຄວາມຍາກລຳ
ບາກຂອງພວກເຂົາ, ແລະພຣະອົງໄດ້ຊົງພາພວກເຂົາໃຫ້ພົ້ນ ຈາກຄວາມທຸກໂສກຂອງພວກເຂົາ.
[20]ພຣະອົງໄດ້ຊົງໃຊ້ຖ້ອຍຄຳຂອງພຣະອົງໄປ, ແລະໄດ້ຮັກສາພວກເຂົາທັງຫລາຍ ແລະພຣະອົງໄດ້ຊ່ວຍພວກເຂົາໃຫ້ພົ້ນຈາກຂຸມຝັງສົບຂອງ
ພວກເຂົາ.[21]ໂອ ປະຊາຊົນເຫລົ່ານັ້ນຄວນສັນຣະເສີນພຣະຢາເວ ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ແລະເພາະສິ່ງອັສະຈັນຕ່າງໆ ທີ່
ພຣະອົງໄດ້ກະທຳໄວ້ ເພື່ອມະນຸດທັງຫລາຍ![22]ໃຫ້ພວກເຂົາຖວາຍເຄື່ອງບູຊາແຫ່ງການຂອບພຣະຄຸນແລະປະກາດພຣະຣາຊະກິດຂອງພຣະອົງ
ດ້ວຍການຮ້ອງເພງ.
[23]ບາງຄົນກໍລົງເຮືອກຳປັ່ນເດີນທາງໄປມາໃນທະເລແລະເຮັດອາຊີບລ້ຽງຊີວິດໃນທະເລກ້ວາງ.[24]ຄົນເຫລົ່ານີ້ໄດ້ເຫັນພຣະຣາຊະກິດຂອງພຣະຢາ
ເວ,ແລະການອັສະຈັນທີ່ພຣະອົງຊົງເຮັດໃນຄື້ນທະເລ.
[25]ເພາະພຣະອົງໄດ້ຊົງສັ່ງແລະໄດ້ໃຫ້ເກີດລົມພາຍຸຊຶ່ງເຮັດໃຫ້ຄື້ນທະເລພັດມາ.[26]ທະເລນັ້ນໄດ້ຖືກຊັດຂຶ້ນໄປສູ່ທ້ອງຟ້າ; ແລະພວກມັນໄດ້ລົງໄປສູ່
ທີ່ເລິກ. ຊີວິດຂອງພວກເຂົາໄດ້ລະລາຍໄປໃນຄວາມທຸກໂສກ.[27]ພວກເຂົາໄດ້ສະດຸດລົ້ມ ແລະໂຊເຊໄປຢ່າງພວກຄົນເມົາເຫລົ້າ ແລະຫມົດປັນ
ຍາ.
[28]ແລ້ວພວກເຂົາໄດ້ຮ້ອງຫາພຣະຢາເວທ່າມກາງຄວາມທຸກລຳບາກຂອງພວກເຂົາ, ແລະພຣະອົງໄດ້ຊົງພາພວກເຂົາອອກຈາກຄວາມທຸກ
ໂສກຂອງພວກເຂົາ.[29]ພຣະອົງໄດ້ເຮັດໃຫ້ພາຍຸສະຫງົບລົງ, ແລະຄື້ນທະເລກໍໄດ້ມິດງຽບ.[30]ແລ້ວພວກເຂົາກໍໄດ້ຍິນດີເພາະທະເລໄດ້ສະຫງົບລົງ,
ແລະພຣະອົງໄດ້ຊົງນຳພວກເຂົາມາເຖິງເມືອງທ່າເຮືອທີ່ເຂົາປຣາຖນາ.
[31]ໂອ ປະຊາຊົນເຫລົ່ານັ້ນຄວນສັນຣະເສີນພຣະຢາເວ, ເພາະຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ແລະເພາະສິ່ງອັສະຈັນຕ່າງໆ ທີ່ພຣະອົງ
ໄດ້ຊົງກະທຳໄວ້ເພື່ອມະນຸດທັງຫລາຍ![32]ໃຫ້ພວກເຂົາຍົກຍ້ອງພຣະອົງໃນທີ່ຊຸມນຸມຊົນ ແລະສັນຣະເສີນພຣະອົງໃນກອງປະຊຸມຂອງບັນດາຜູ້ອາ
ວຸໂສ.
[33]ພຣະອົງໄດ້ປ່ຽນແມ່ນ້ຳໃຫ້ເປັນຖິ່ນແຫ້ງແລ້ງກັນດານ, ນ້ຳພຸເຮັດໃຫ້ເປັນແຜ່ນດິນແຫ້ງເປົ່າ,[34]ແລະແຜ່ນດິນທີ່ມີຜົນດົກໃຫ້ເປັນທີ່ຮ້າງເປົ່າ
ເພາະຄວາມຊົ່ວຮ້າຍຂອງຊາວແຜ່ນດິນນັ້ນ.[35]ພຣະອົງປ່ຽນຖິ່ນແຫ້ງແລ້ງກັນດານໃຫ້ເປັນສະນ້ຳ ແລະແຜ່ນດິນແຫ້ງເປົ່າໃຫ້ເປັນນ້ຳພຸທັງ
ຫລາຍ.
[36]ແລະພຣະອົງໃຫ້ຄົນຫິວໂຫຍອາສັຍທີ່ນັ້ນ, ແລະພວກເຂົາສ້າງເມືອງທີ່ຈະອາສັຍໄດ້.[37]ພວກເຂົາສ້າງເມືອງຫນຶ່ງຂຶ້ນມາເພື່ອຫວ່ານນາເພື່ອປູກ
ສວນອະງຸ່ນ, ແລະເພື່ອໃຫ້ເກີດການເກັບກ່ຽວຢ່າງອຸດົມສົມບູນ.[38]ພຣະອົງຊົງອວຍພອນພວກເຂົາ. ເພື່ອພວກເຂົາຈະໄດ້ມີຈຳນວນມະຫາສານ ພ
ຣະອົງບໍ່ໄດ້ໃຫ້ຝູງສັດຂອງພວກເຂົາລົດຈຳນວນລົງເລີຍ.
[39]ພວກເຂົາໄດ້ຖືກລົດທອນຈຳນວນແລະຖືກຢຽບໃຫ້ຕ່ຳໂດຍຄວາມທຸກໃຈທີ່ເຈັບປວດແລະການທົນທຸກ.[40]ພຣະອົງເທຄວາມຫມິ່ນປະ ຫມາດລົງ
ເທິງພວກຜູ້ນຳ ແລະເຮັດໃຫ້ພວກເຂົາເລາະໄປໃນຖິ່ນແຫ້ງແລ້ງກັນດານ ທີ່ຊຶ່ງບໍ່ມີຫົນທາງ.
[41]ແຕ່ພຣະອົງຊົງປົກປ້ອງຄົນຂັດສົນຈາກຄວາມທຸກຍາກແລະຊົງດູແລບັນດາຄົວເຮືອນຂອງເຂົາຄືດູແລຝູງແບ້ ແກະ.[42]ຄົນຊອບທັມຈະເຫັນສິ່ງນີ້
ແລະຊື່ນບານ, ແລະຄວາມຊົ່ວທັງຫມົດກໍປິດປາກຂອງມັນ.[43]ຜູ້ໃດມີປັນຍາກໍຄວນສັງເກດສິ່ງເຫລົ່ານີ້ແລະຕຶກຕອງເຖິງກິຈະການແຫ່ງຄວາມຊື່
ສັດແຫ່ງຄຳສັນຍາຂອງພຣະຢາເວ.

 generated on Tue Jun 17 19:01:42 2025

108 ບົດເພງ, ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະເຈົ້າ, ຈິດໃຈຂອງຂ້ານ້ອຍໝັ້ນຄົງ; ຂ້ານ້ອຍຈະຮ້ອງເພງ, ແມ່ນແລ້ວພຣະເຈົ້າຂ້າ
ນ້ອຍ, ຂ້ານ້ອຍຈະຮ້ອງເພງສັນຣະເສີນດ້ວຍຈິດໃຈທີ່ຍົກຍ້ອງຂອງຂ້ານ້ອຍ.[2]ພິນໃຫຍ່ແລະພິນເຂົາຄູ່ເອີຍ;
ຈົ່ງຕື່ນເຖີດຂ້ານ້ອຍຈະປຸກຕາເວັນໃຫ້ລຸກຂຶ້ນ.

[3]ຂ້າແດ່ພຣະຢາເວ, ຂ້ານ້ອຍຖວາຍຂອບພຣະຄຸນແດ່ພຣະອົງ, ທ່າມກາງຊົນຊາດທັງຫລາຍ; ຂ້ານ້ອຍຈະຮ້ອງເພງສັນຣະເສີນແດ່ພຣະອົງທ່າມ
ກາງຊົນທຸກຊາດທຸກພາສາ.[4]ເພາະຄວາມຊື່ສັດແທ່ງຄໍາສັນຍາຂອງພຣະອົງໃຫຍ່ຍິ່ງເໜືອບັນດາຟ້າສະຫວັນ; ຄວາມສັດຈິງຂອງພຣະອົງສູງໄປ
ເຖິງທ້ອງຟ້າ.
[5]ຂ້າແດ່ພຣະເຈົ້າ, ຂໍຊົງໄດ້ຮັບການຍົກຍ້ອງເໜືອຟ້າສະຫວັນ, ແລະສະຫງ່າຣາສີຂອງພຣະອົງໄດ້ຮັບການຍົກຍ້ອງທົ່ວທັງແຜ່ນດິນໂລກ.[6]ເພື່ອ
ໃຫ້ຜູ້ທີ່ພຣະອົງຊົງຮັກຈະໄດ້ຮັບການຊ່ວຍເຫລືອ, ຂໍຊົງຊ່ວຍກູ້ພວກຂ້ານ້ອຍດ້ວຍມືຂວາຂອງພຣະອົງ, ແລະຂໍຊົງຕອບຄໍາອະທິຖານຂ້າ
ນ້ອຍແດ່.
[7]ພຣະເຈົ້າ, ໄດ້ກ່າວດ້ວຍຄວາມບໍຣິສຸດຂອງພຣະອົງວ່າ; "ເຮົາຈະຍິນດີ ເຮົາຈະແບ່ງເມືອງຊີເຄມ; ແລະແບ່ງຮ່ອມພູເຂົາເມືອງຊຸກໂກດອອກ.[8]ກີ
ເລອາດເປັນຂອງເຮົາ, ແລະມານາເຊເປັນຂອງເຮົາ; ເອຟຣາອີມກໍເປັນໝວກເຫລັກຂອງເຮົາ; ຢູດາເປັນຕະບອງຄອງອໍານາດຂອງເຮົາ.
[9]ເຮົາຈະໃຊ້ໂມອາບເປັນອ່າງລ້າງສ່ວຍຂອງເຮົາ; ເຮົາຈະໂຍນເກີບຂອງເຮົາລົງເທິງເອໂດມ; ເຮົາຈະໂຮ່ຮ້ອງດ້ວຍຊັຍຊະນະເພາະຟີລິສະຕິນ.
[10]ຜູ້ໃດຈະພາຂ້ານ້ອຍເຂົ້າໄປໃນເມືອງທີ່ແຂງແກ່ນ? ຜູ້ໃດຈະນໍາຂ້ານ້ອຍໄປຍັງເອໂດມ?
[11]ຂ້າແດ່ພຣະເຈົ້າ, ພຣະອົງໄດ້ຊົງຖິ້ມພວກຂ້ານ້ອຍແລ້ວບໍ່? ພຣະອົງຈະບໍ່ໄປຮົບກັບກອງທັບຂອງພວກຂ້ານ້ອຍບໍ?[12]ຂໍຊົງປຣະທານຄວາມຊ່ວຍ
ເຫລືອແກ່ພວກຂ້ານ້ອຍໃນການຕໍ່ຕ້ານສັດຕຣູ.[13]ເຮົາຈະມີຊັຍຊະນະດ້ວຍຄວາມຊ່ວຍເຫລືອຂອງພຣະເຈົ້າ; ພຣະອົງຈະຊົງຢຽບພວກສັດຕຣູ
ຂອງເຮົາລົງ.


generated on Tue Jun 17 19:01:42 2025

109 ສຳລັບຄະນະນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະເຈົ້າ, ຜູ້ຊຶ່ງຂ້ານ້ອຍສັນຣະເສີນ ຂໍຢ່າຊົງມິດງຽບ,[2]ເພາະຄົນຊົ່ວ
ແລະຄົນຫລອກລວງໂຈມຕີຂ້ານ້ອຍ; ພວກເຂົາເວົ້າຕົວະໃສ່ຂ້ານ້ອຍ.[3]ພວກເຂົາອ້ອມຂ້ານ້ອຍແລະເວົ້າສິ່ງທີ່ຫນ້າກຽດຊັງ, ແລະພວກ
ເຂົາໂຈມຕີຂ້ານ້ອຍໂດຍບໍ່ມີສາເຫດ.

[4]ພວກເຂົາຕອບແທນຄວາມຮັກຂອງຂ້ານ້ອຍ, ໂດຍໃສ່ຮ້າຍຂ້ານ້ອຍແຕ່ຂ້ານ້ອຍອະທິຖານເພື່ອພວກເຂົາ.[5]ພວກເຂົາຕອບແທນຄວາມດີຂອງຂ້າ
ນ້ອຍ ດ້ວຍຄວາມຊົ່ວ ແລະພວກເຂົາກຽດຊັງຄວາມຮັກຂອງຂ້ານ້ອຍ.
[6]ຂໍຊົງຕັ້ງຄົນຊົ່ວໃຫ້ຢູ່ເຫນືອສັດຕູຣູເຊັ່ນພວກຄົນເຫລົ່ານີ້; ຂໍຊົງຕັ້ງຜູ້ກ່າວໂທດໃຫ້ຢືນທີ່ຂວາມືຂອງເຂົາ.[7]ເມື່ອເຂົາຖືກຕັດສິນຄວາມ ກໍຂໍໃຫ້ພົບ
ວ່າເຂົາຜິດ, ຂໍໃຫ້ຄຳອະທິຖານຂອງເຂົາຖືກຖືວ່າເປັນບາບ; ຂໍໃຫ້ວັນເວລາເຂົາເຫລືອຫນ້ອຍ.
[8]ຂໍໃຫ້ວັນເວລາຂອງລາວມີຫນ້ອຍ; ຂໍໃຫ້ອີກຜູ້ຫນຶ່ງມາຍຶດຕຳແຫນ່ງຂອງເຂົາ.[9]ຂໍໃຫ້ລູກໆຂອງເຂົາກຳພ້າພໍ່, ແລະຂໍໃຫ້ເມຍຂອງເຂົາເປັນຫ
ມ້າຍ.[10]ຂໍໃຫ້ລູກໆຂອງເຂົາເລາະໄປແລະຂໍທານ, ທ່ຽວຂໍຄວາມຊ່ວຍເຫລືອເມື່ອພວກເຂົາອອກຈາກບ້ານ ທີ່ເພພັງຂອງພວກເຂົາ.
[11]ຂໍໃຫ້ເຈົ້າຫນີ້ມາຍຶດຂອງທັງຫມົດທີ່ເຂົາມີຢູ່; ຂໍພວກຄົນຕ່າງຖິ່ນມາປຸ້ນສິ່ງທີ່ເຂົາຫາມາໄດ້.[12]ຂໍຢ່າໃຫ້ຜູ້ໃດຍື່ນຄວາມກະຣຸນາໃດໆໃຫ້ແກ່ເຂົາ;
ຂໍຢ່າໃຫ້ຜູ້ໃດເມດຕາລູກໆ ທີ່ກຳພ້າຂອງເຂົາ.[13]ຂໍໃຫ້ລູກຫລານຂອງເຂົາຖືກທຳລາຍ; ຂໍໃຫ້ຊື່ຂອງພວກເຂົາຖືກລົບອອກຈາກຄົນໃນ
ຮຸ້ນຫລັງເຖີດ.
[14]ຂໍໃຫ້ຄວາມບາບທັງຫລາຍຂອງບັນພະບຸຣຸດຂອງເຂົາຖືກຂຸດຄຸ້ຍຂຶ້ນຕໍ່ພຣະຢາເວ; ແລະຂໍຢ່າໃຫ້ບາບຂອງແມ່ຂອງເຂົາໄດ້ຮັບການອະພັຍ.[15]ຂໍ
ໃຫ້ຄວາມຜິດຂອງພວກເຂົາຢູ່ຕໍ່ຫນ້າພຣະຢາເວສະເຫມີ; ຂໍໃຫ້ພຣະຢາເວທຳລາຍຄວາມຈົດຈຳຂອງພວກເຂົາໄປຈາກແຜ່ນດິນໂລກ.[16]ຂໍໃຫ້ພ
ຣະຢາເວຊົງກະທຳເຊັ່ນນີ້, ເພາະຊາຍຄົນນີ້ບໍ່ເຄີຍສົນໃຈທີ່ສະແດງຄວາມຊື່ສັດແຫ່ງຄຳສັນຍາ, ແຕ່ກັບຂົ່ມຂູ່ຜູ້ທີ່ຖືກບີບບັງຄັບ, ຄົນຂັດສົນ ແລະ
ທໍ້ໃຈຈົນຕາຍ.
[17]ເຂົາໄດ້ຮັກທີ່ຈະສາບແຊ່ງ; ຂໍໃຫ້ຄຳປ່ອຍດ່ານັ້ນກັບໄປຕົກເທິງເຂົາ. ເຂົາໄດ້ກຽດຊັງຄຳອວຍພອນ; ຂໍໃຫ້ພອນບໍ່ມາເຖິງເຂົາ.[18]ເຂົາໄດ້ສວມ
ການສາບແຊ່ງຢ່າງກັບສວມເສື້ອຜ້າ, ແລະຄຳແຊ່ງສາບຂອງເຂົາໄດ້ເຂົ້າໄປໃນຮ່າງກາຍຂອງເຂົາຄືຢ່າງນ້ຳ, ເຂົ້າໄປໃນກະດູກຂອງເຂົາຢ່າງນ້ຳ
ມັນ.
[19]ຂໍໃຫ້ຄຳປ່ອຍດ່າຂອງເຂົານັ້ນເປັນຄືເສື້ອຜ້າທີ່ເຂົາສວມໃສ່ເພື່ອປົກປິດຕົວເອງ, ຄືເຂັມຂັດທີ່ເຂົາຄາດໄວ້ສະເຫມີ.[20]ຂໍໃຫ້ສິ່ງນີ້ເປັນບຳ ເຫນັດ
ຈາກພຣະຢາເວແກ່ຜູ້ທີ່ກ່າວຫາຕໍ່ຂ້ານ້ອຍ, ແກ່ຜູ້ທີ່ກ່າວສິ່ງຊົ່ວກ່ຽວກັບຂ້ານ້ອຍ.
[21]ຂ້າແດ່ພຣະຢາເວ, ອົງພຣະຜູ້ເປັນເຈົ້າ,ຂອງຂ້ານ້ອຍຂໍຊົງຊ່ວຍຂ້ານ້ອຍດ້ວຍຄວາມເມດຕາເພື່ອເຫັນແກ່ພຣະນາມຊື່ຂອງພຣະອົງ, ເພາະ
ຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງນັ້ນປະເສີດ, ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນ.[22]ເພາະຂ້ານ້ອຍຖືກກົດຂີ່ແລະຂັດສົນ, ແລະໃຈຂ້ານ້ອຍກໍບາດ
ເຈັບຢູ່ພາຍໃນຂ້ານ້ອຍ.[23]ຂ້ານ້ອຍກຳລັງຈາກໄປຢ່າງເງົາໃນຕອນຄ່ຳ ຂ້ານ້ອຍຖືກພັດອອກໄປເຫມືອນແມງໄມ້.
[24]ຫົວເຂົ່າຂອງຂ້ານ້ອຍກໍອ່ອນແຮງຈາກການອົດອາຫານ; ຂ້ານ້ອຍກຳລັງກາຍເປັນຄົນທີ່ມີຫນັງຫຸ້ມກະດູກ.[25]ເມື່ອຄົນເຫັນແລ້ວເຂົາກໍເຍາະເຍີ້ຍ
ຫົວຂວັນຂອງຂ້ານ້ອຍ; ພວກເຂົາທັງຫລາຍເຫັນຂ້ານ້ອຍ ພວກເຂົາກໍແກ່ງຫົວ.
[26]ຂໍຊົງຊ່ວຍຂ້ານ້ອຍ, ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍ; ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນດ້ວຍຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ.[27]ຂໍ
ໃຫ້ພວກເຂົາຮູ້ວ່ານີ້ເປັນສີມືຂອງພຣະອົງ, ນັ້ນຄືພຣະອົງ, ພຣະຢາເວ, ໄດ້ຊົງເຮັດການນີ້.
[28]ແມ່ນວ່າພວກເຂົາປ່ອຍດ່າຂ້ານ້ອຍ, ຂໍຊົງໂຜດອວຍພອນຂ້ານ້ອຍ ເມື່ອພວກເຂົາໂຈມຕີ; ກໍຂໍໃຫ້ພວກເຂົາໄດ້ອັບອາຍ ແຕ່ຂໍໃຫ້ຜູ້ຮັບໃຊ້ຂອງພ
ຣະອົງຍິນດີ.[29]ຂໍໃຫ້ພວກສັດຕຣູຂອງຂ້ານ້ອຍ; ໄດ້ຫົ່ມຄວາມຂາຍຫນ້າຂໍໃຫ້ພວກເຂົາໄດ້ສວມຄວາມອັບອາຍຢ່າງເສື້ອຄຸມ.
[30]ດ້ວຍປາກຂອງຂ້ານ້ອຍ ຂ້ານ້ອຍຈະຖວາຍຂອບພຣະຄຸນຢ່າງຍິ່ງແດ່ພຣະຢາເວ; ຂ້ານ້ອຍຈະສັນຣະເສີນພຣະອົງໃນທ່າມກາງຝູງຊົນ.[31]ເພາະ
ພຣະອົງຊົງຢືນທີ່ຂວາມືຂອງຄົນຂັດສົນ, ເພື່ອຊ່ວຍເຂົາໃຫ້ລອດຈາກບັນດາຜູ້ທີ່ພິພາກສາເຂົາ.

 generated on Tue Jun 17 19:01:42 2025

110 ບົດເພງສັນຣະເສີນຂອງດາວິດ.[1]ພຣະຢາເວ, ກ່າວກັບເຈົ້ານາຍຂອງຂ້ານ້ອຍວ່າ, "ຈົ່ງນັ່ງທີ່ຂວາມືຂອງເຮົາ ຈົນກວ່າເຮົາຈະເຮັດໃຫ້ພວກ
ສັດຕຣູຂອງເຈົ້າເປັນແທ່ນຮອງຕີນຂອງເຈົ້າ."

[2]ພຣະຢາເວ ຈະຊົງຍື່ນກະບອງແຫ່ງພຣະກຳລັງຂອງທ່ານຈາກຊີໂອນ; ໃຫ້ຄອບຄອງທ່າມກາງພວກສັດຕຣູຂອງທ່ານ.[3]ປະຊາຊົນຂອງທ່ານຈະ
ຕິດຕາມທ່ານໄປໂດຍສວມເຄື່ອງແຕ່ງກາຍບໍຣິສຸດດ້ວຍສະມັກໃຈໃນວັນແຫ່ງອຳນາດຂອງທ່ານ; ຈາກທ້ອງຂອງເວລາເຊົ້າ ໄວຫນຸ່ມຂອງທ່ານຈະ
ເປັນຂອງທ່ານຄືຢ່າງນ້ຳຫມອກ.
[4]ພຣະຢາເວໄດ້ຊົງສັນຍາແລ້ວ, ແລະຈະບໍ່ປ່ຽນແປງວ່າ: "ເຈົ້າເປັນປະໂລຫິດເປັນນິດ, ຕາມຢ່າງເມຄີເຊເດັກ."
[5]ອົງພຣະຜູ້ເປັນເຈົ້າຊົງຢູ່ທີ່ຂວາມືຂອງທ່ານ. ພຣະອົງຈະຊົງປຣະຫານບັນດາກະສັດໃນວັນແຫ່ງຄວາມໃຈຮ້າຍຂອງພຣະອົງ.[6]ພຣະອົງຈະຊົງພິ
ພາກສາປະຊາຊາດທັງຫລາຍ; ພຣະອົງຈະຊົງໃຫ້ສະຫນາມຮົບເຕັມໄປດ້ວຍຊາກສົບ; ພຣະອົງຈະປຣະຫານພວກຜູ້ນຳປະຊາຊາດທັງຫລາຍ.
[7]ກະສັດຈະຊົງດື່ມນ້ຳຈາກລຳທານຂ້າງທາງ, ແລ້ວທ່ານຈະຊົງຍົກຫົວຂອງທ່ານຂຶ້ນສູງຫລັງຈາກຊັຍຊະນະ.

 generated on Tue Jun 17 19:01:42 2025

111 1ສັນຣະເສີນພຣະຢາເວ. ຂ້ານ້ອຍຈະຖວາຍການຂອບພຣະຄຸນແດ່ ພຣະຢາເວ ດ້ວຍສຸດໃຈຂອງຂ້ານ້ອຍທີ່ຊຸມນຸມຂອງຄົນຊອບທັມ, ໃນ
ການຊຸມນຸມຂອງພວກເຂົາ. 2ພາຣະກິດຂອງພຣະຢາເວ, ນັ້ນໃຫຍ່ຍິ່ງຫລາຍເປັນທີ່ລໍຄອຍຂອງທຸກຄົນທີ່ປຣາຖນາສິ່ງເຫລົ່ານັ້ນ. 3ການກະ
ທຳຂອງພຣະອົງສູງສົ່ງແລະຮຸ່ງເຮືອງ, ແລະຄວາມຊອບທັມຂອງພຣະອົງດຳຣົງຢູ່ເປັນນິດ.

4ພຣະອົງຊົງກະທຳສິ່ງອັສະຈັນຕ່າງໆ ຊຶ່ງຈະເປັນທີ່ຣະນຶກເຖິງ; ພຣະຢາເວຊົງມີພຣະຄຸນແລະຊົງພຣະກາຣຸນາ. 5ພຣະອົງຊົງປຣະທານອາຫານ
ແກ່ບັນດາຜູ້ຕິດຕາມທີ່ສັດຊື່ທັງຫລາຍຂອງພຣະອົງ. ພຣະອົງຈະຊົງຣະນຶກເຖິງພັນທະສັນຍາຂອງພຣະອົງສະເຫມີ. 6ພຣະອົງໄດ້ສຳແດງ
ພາຣະກິດອັນຊົງຣິທານຸພາບຂອງພຣະອົງແກ່ປະຊາຊົນຂອງພຣະອົງ ໂດຍຊົງປຣະທານມໍຣະດົກຂອງປະຊາຊາດທັງຫລາຍໃຫ້ແກ່ພວກເຂົາ.
7ບັນດາຜົນງານແຫ່ງມືຂອງພຣະອົງນັ້ນຄືຄວາມຫນ້າເຊື່ອຖືແລະຄວາມຍຸຕິທັມ; ບັນດາຄຳສັ່ງສອນທັງຫມົດຂອງພຣະອົງເຊື່ອຖືໄດ້. 8ພຣະອົງໄດ້
ຊົງຕັ້ງພັນທະສັນຍາຂອງພຣະອົງເປັນນິຣັນດອນ, ພຣະນາມຊື່ຂອງພຣະອົງນັ້ນສັກສິດແລະຫນ້າຢຳເກງ. 9ພຣະອົງໄດ້ຊົງປຣະທານຊັຍຊະນະແກ່
ປະຊາຊົນຂອງພຣະອົງ; ພຣະອົງໄດ້ແຕ່ງຕັ້ງພັນທະສັນຍາຂອງພຣະອົງຕະຫລອດໄປ, ບໍຣິສຸດ ແລະອັສະຈັນແມ່ນນາມຊື່ນີ້.
10ການຖວາຍກຽຕແດ່ພຣະຢາເວ ເປັນທີ່ເລີ່ມຕົ້ນຂອງສະຕິປັນຍາ; ບັນດາຜູ້ທີ່ປະຕິບັດຕາມຄຳສັ່ງສອນກໍໄດ້ຄວາມເຂົ້າໃຈດີ. ການສັນຣະເສີນ
ຂອງພຣະອົງ ດຳຣົງຢູ່ເປັນນິດ.


generated on Tue Jun 17 19:01:42 2025

112 [1]ຈົ່ງສັນຣະເສີນພຣະຢາເວ. ຄົນທີ່ເຊື່ອຟັງພຣະຢາເວກໍເປັນສຸກ, ຜູ້ນັ້ນຍິນດີຢ່າງຍິ່ງໃນຂໍ້ຄໍາສັ່ງທັງຫລາຍຂອງພຣະອົງ. [2]ເຊື້ອສາຍຂອງ
ເຂົາຈະມີອໍານາດໃນແຜ່ນດິນໂລກ; ເຊື້ອສາຍຂອງຄົນຊອບທັມຈະໄດ້ຮັບພຣະພອນ.

[3]ຊັບສິນບັດແລະຄວາມຮັ່ງມີຢູ່ໃນພຣະວິຫານຂອງພຣະອົງ; ຄວາມຊອບທັມຂອງພຣະອົງຈະດໍາຣົງຢູ່ເປັນນິດ. [4]ແສງສະຫວ່າງສ່ອງເຂົ້າໄປໃນ
ຄວາມມືດສໍາລັບຄົນສັດຊື່; ພຣະອົງຊົງມີພຣະຄຸນ, ຊົງພຣະກາຣຸນາ ແລະຊົງຍຸຕິທັມ. [5]ເປັນເລື່ອງທີ່ດີສໍາລັບຄົນທີ່ສະແດງຄວາມເມດຕາແລະໃຫ້
ຢືມເງິນ, ຄືຜູ້ດໍາເນີນກິຈະການຂອງເຂົາດ້ວຍຄວາມຊື່ສັດສຸຈະຣິດ.
[6]ເພາະເຂົາຈະບໍ່ຫລົ້ມຈົມເລີຍ; ຄົນທີ່ຊອບທັມຈະມີຄົນຣະນຶກເຖິງຢູ່ເປັນນິຣັນ. [7]ເຂົາຈະບໍ່ຢ້ານຂ່າວຮ້າຍ; ໃຈຂອງເຂົາຫມັ້ນຄົງໃນການວາງໃຈ
ໃນພຣະຢາເວ.
[8]ຈິດໃຈຂອງເຂົາສະຫງົບ, ໂດຍບໍ່ມີຄວາມຢ້ານ, ຈົນກວ່າເຂົາເບິ່ງເຫັນຊັຍຊະນະເຫນືອສັດຕຣູຂອງເຂົາ. [9]ເຂົາແຈກຈ່າຍໃຫ້ແກ່ຄົນຍາກຈົນດ້ວຍ
ໃຈເມດຕາ; ຄວາມຊອບທັມຂອງເຂົາດໍາຣົງຢູ່ເປັນນິດ; ເຂົາຈະໄດ້ຮັບການຍົກຍ້ອງດ້ວຍກຽຕ.
[10]ຄົນຊົ່ວຮ້າຍຈະເຫັນສິ່ງນີ້ແລ້ວເກີດຄວາມບໍ່ພໍໃຈ; ເຂົາຈະຂົບແຂ້ວດ້ວຍຄວາມໂກດຮ້າຍກຽດຊັງແລະເຂົາຈະລະລາຍໄປ; ຄວາມປຣາຖນາ
ຂອງພວກຄົນຊົ່ວຮ້າຍຈະພັງພິນາດ.


generated on Tue Jun 17 19:01:42 2025

113 [1]ຈົ່ງສັນຣະເສີນພຣະຢາເວ. ບັນດາຜູ້ຮັບໃຊ້ຂອງພຣະຢາເວເອີຍ, ຈົ່ງສັນຣະເສີນພຣະອົງ; ຈົ່ງສັນຣະເສີນພຣະນາມຊື່ພຣະຢາເວເຖີດ.
[2]ຂໍໃຫ້ພຣະນາມຊື່ຂອງພຣະຢາເວ, ເປັນທີ່ສັນຣະເສີນທັງບັດນີ້ແລະຕະຫລອດໄປ.

[3]ຕັ້ງແຕ່ທິດຕາເວັນອອກຈົນເຖິງທິດຕາເວັນຕົກ, ພຣະນາມຊື່ຂອງພຣະຢາເວຄວນໄດ້ຮັບການສັນຣະເສີນ. [4]ພຣະຢາເວເປັນທີ່ຍົກຍ້ອງເຊີດຊູ
ເຫນືອປະຊາຊາດທັງຫມົດ, ແລະສະຫງ່າຣາສີຂອງພຣະອົງສູງເຫນືອທ້ອງຟ້າທັງຫລາຍ.
[5]ບໍ່ມີຜູ້ໃດເປັນເຫມືອນພຣະຢາເວພຣະເຈົ້າຂອງເຮົາ, ຜູ້ຊຶ່ງທີ່ປະທັບຂອງພຣະອົງຢູ່ເຫນືອຟ້າສະຫວັນ, [6]ແຕ່ພຣະອົງຫລຽວລົງມາທີ່ທ້ອງຟ້າແລະ
ທີ່ແຜ່ນດິນໂລກ?
[7]ພຣະອົງຊົງຍົກຄົນຈົນຂຶ້ນມາຈາກດິນແລະຊົງຍົກຄົນຂັດສົນຂຶ້ນມາຈາກກອງຂີ້ເຖົ່າ, [8]ເພື່ອໃຫ້ເຂົານັ່ງກັບບັນດາເຈົ້າເມືອງ, ກັບເຈົ້າເມືອງຂອງປະ
ຊາຊົນຂອງພຣະອົງ.
[9]ພຣະອົງຊົງປຣະທານບ້ານໃຫ້ແກ່ຍິງຫມັນໃຫ້ມີບ້ານຢູ່, ພຣະອົງໃຫ້ນາງເປັນແມ່ແຫ່ງຄວາມຊື່ນບານຂອງລູກທັງຫລາຍ. ຈົ່ງສັນຣະເສີນພຣະ
ຢາເວເຖີດ!


generated on Tue Jun 17 19:01:42 2025

114 [1]ເມື່ອອິສະຣາເອນໄດ້ອອກຈາກເອຢິບ, ຄືເຊື້ອສາຍຢາໂຄບອອກຈາກປະຊາຊົນຊຶ່ງເວົ້າພາສາຕ່າງໆຊາດ,[2]ຢູດາໄດ້ກາຍເປັນປະຊາຊົນຂອງ
ພຣະເຈົ້າອົງບໍຣິສຸດ, ອິສະຣາເອນເປັນຣາຊອານາຈັກຂອງພຣະອົງ.

[3]ທະເລແດງໄດ້ເຫັນແລະໄດ້ປົບຫນີໄປ; ຈໍແດນໄດ້ຫັນຫລັງກັບ.[4]ບັນດາພູເຂົາໄດ້ກະໂດດເຫມືອນຝູງແບ້ຕົວຜູ້, ບັນດາເນີນເຂົາໄດ້ກະໂດດ
ເຫມືອນຝູງລູກແກະ ທະເລເອີຍ.
[5]ເປັນຫຍັງເຈົ້າໄດ້ຫນີ? ແມ່ນ້ຳຈໍແດນເອີຍ, ເປັນຫຍັງເຈົ້າໄດ້ຫັນຫລັງກັບ?[6]ພູເຂົາເອີຍ, ເປັນຫຍັງເຈົ້າຈຶ່ງໄດ້ກະໂດດເຫມືອນຝູງແບ້ ໂຕຜູ້? ເນີນ
ພູນ້ອຍໆ ເອີຍ, ເປັນຫຍັງເຈົ້າຈຶ່ງໄດ້ກະໂດດເຫມືອນຝູງແກະນ້ອຍ?[7]ແຜ່ນດິນໂລກເອີຍ, ຈົ່ງຕົວສັ່ນ ຕໍ່ຫນ້າຂອງອົງພຣະຜູ້ເປັນເຈົ້າເຖີດ, ຄືຕໍ່
ຫນ້າພຣະເຈົ້າ, ຂອງຢາໂຄບ.
[8]ພຣະອົງໄດ້ຊົງປ່ຽນຫີນໃຫ້ເປັນສະນ້ຳ, ຄືຊົງປ່ຽນຫີນແຂງໃຫ້ເປັນນ້ຳພຸທັມະຊາດ.


generated on Tue Jun 17 19:01:42 2025

115 [1]ພຣະກຽດນີ້ບໍ່ແມ່ນມີແກ່ພວກຂ້ານ້ອຍ, ຂ້າແດ່ພຣະຢາເວ, ບໍ່ແມ່ນມີແກ່ພວກຂ້ານ້ອຍເລີຍ, ແຕ່ມີແດ່ພຣະນາມຊື່ຂອງພຣະອົງ ເນື່ອງ
ຈາກຄວາມຊື່ສັດແຫ່ງຄຳສັນຍາແລະຄວາມເຊື່ອຖືໄດ້ຂອງພຣະອົງ.[2]ເປັນຫຍັງບັນດາປະຊາຊາດຈະກ່າວວ່າ, "ພຣະເຈົ້າຂອງເຂົາທັງ
ຫລາຍຢູ່ໃສ?"

[3]ພຣະເຈົ້າຂອງເຮົາທັງຫລາຍຢູ່ໃນສະຫວັນ; ພຣະອົງກໍຊົງກະທຳສິ່ງໃດໆ ກໍໄດ້ທີ່ພຣະອົງຊົງພໍໃຈ.[4]ຮູບເຄົາຣົບທັງຫລາຍຂອງຄົນເຫລົ່ານັ້ນເປັນ
ເງິນແລະທອງຄຳ, ເປັນຜົນງານທີ່ສ້າງຂຶ້ນດ້ວຍມືຂອງມະນຸດ.
[5]ຮູບເຫລົ່ານັ້ນມີປາກ, ແຕ່ພວກມັນເວົ້າບໍ່ໄດ້; ມີຕາແຕ່ພວກມັນເບິ່ງບໍ່ເຫັນ.[6]ພວກເຂົາມີຫູ, ແຕ່ພວກມັນຟັງບໍ່ໄດ້, ພວກເຂົາມີດັງ, ແຕ່ພວກມັນ
ດົມກິ່ນບໍ່ໄດ້.
[7]ຮູບເຫລົ່ານັ້ນມີມືແຕ່ຄຳບໍ່ໄດ້ ພວກມັນມີຕີນ, ແຕ່ພວກມັນຍ່າງໄປມາບໍ່ໄດ້; ຮູບເຫລົ່ານັ້ນເວົ້າຈາກປາກບໍ່ໄດ້.[8]ຜູ້ທີ່ເຮັດຮູບເຫລົ່ານັ້ນຈະເປັນຄືຮູບ
ເຫລົ່ານັ້ນ ທຸກຄົນທີ່ວາງໃຈໃນຮູບເຫລົ່ານັ້ນກໍເຊັ່ນກັນ.
[9]ອິສະຣາເອນເອີຍ, ຈົ່ງວາງໃຈໃນພຣະຢາເວເຖີດ; ພຣະອົງຊົງເປັນຜູ້ຊ່ວຍຊູແລະເປັນໂລ້ຂອງເຈົ້າ.[10]ເຊື້ອສາຍອາໂຣນເອີຍ, ຈົ່ງວາງໃຈໃນພຣະ
ຢາເວເຖີດ; ພຣະອົງຊົງເປັນຜູ້ຊ່ວຍຊູແລະເປັນໂລ້ຂອງເຈົ້າ.[11]ທ່ານຜູ້ຖວາຍພຣະກຽດພຣະຢາເວເອີຍ, ຈົ່ງວາງໃຈໃນພຣະອົງເຖີດ; ພຣະອົງຊົງ
ເປັນຜູ້ຊ່ວຍຊູແລະເປັນໂລ້ຂອງເຈົ້າ.
[12]ພຣະຢາເວ ຊົງລະນຶກເຖິງພວກຂ້ານ້ອຍ ພຣະອົງຈະຊົງອວຍພຣະພອນພວກເຮົາ; ພຣະອົງຈະຊົງອວຍພອນເຊື້ອສາຍອິສະຣາເອນ; ພຣະອົງ
ຈະຊົງອວຍພອນເຊື້ອສາຍອາໂຣນ.[13]ພຣະອົງຈະຊົງອວຍພຣະພອນຜູ້ທີ່ຖວາຍພຣະກຽດຂອງພຣະຢາເວ, ທັງຜູ້ອາຍຸນ້ອຍແລະຜູ້ສູງອາຍຸ.[14]ຂໍພ
ຣະຢາເວຊົງໃຫ້ພວກທ່ານເພີ່ມພູນຫລາຍຂຶ້ນເລື້ອຍໆ, ທັງທ່ານແລະລູກຫລານທັງຫລາຍຂອງທ່ານ.
[15]ຂໍໃຫ້ພວກທ່ານຮັບພຣະພອນຈາກພຣະຢາເວ, ຜູ້ຊົງສ້າງຟ້າສະຫວັນແລະແຜ່ນດິນໂລກ[16]ທ້ອງຟ້າທັງຫລາຍເປັນຂອງພຣະຢາເວ; ແຕ່ ພຣະ
ອົງປະທານແຜ່ນດິນໂລກແກ່ມະນຸດທັງຫລາຍ.
[17]ຄົນຕາຍບໍ່ອາດສັນຣະເສີນພຣະຢາເວ, ແລະທຸກຄົນທີ່ລົງໄປສູ່ທີ່ງຽບສະຫງົບກໍເຊັ່ນກັນ;[18]ແຕ່ຂ້ານ້ອຍຈະຖວາຍຄຳສັນຣະເສີນແດ່ພຣະຢາເວ
ຕັ້ງແຕ່ບັດນີ້ເປັນຕົ້ນໄປເປັນນິດ. ຈົ່ງສັນຣະເສີນພຣະຢາເວເຖີດ.


generated on Tue Jun 17 19:01:42 2025

116 [1]ຂ້ານ້ອຍຮັກພຣະຢາເວ ເພາະພຣະອົງຊົງຟັງສຽງແລະຄຳວິງວອນຂໍຄວາມເມດຕາຂອງຂ້ານ້ອຍ.[2]ເພາະພຣະອົງໄດ້ງ່ຽງຫູຟັງຂ້ານ້ອຍ,
ຂ້ານ້ອຍຮ້ອງຫາພຣະອົງຕາບທີ່ຂ້ານ້ອຍມີຊີວິດຢູ່.

[3]ເຊືອກແຫ່ງຄວາມຕາຍໄດ້ອ້ອມຂ້ານ້ອຍ, ແລະບ້ວງແຫ່ງແດນຄົນຕາຍໄດ້ຈັບຂ້ານ້ອຍໄວ້; ຂ້ານ້ອຍໄດ້ຮູ້ສຶກເຈັບປວດແລະເສຍໃຈ.[4]ແລ້ວຂ້າ
ນ້ອຍໄດ້ຮ້ອງຫາອອກພຣະນາມຊື່ຂອງພຣະຢາເວວ່າ "ຂ້າແດ່ພຣະຢາເວ ຂໍຊົງຊ່ວຍຊີວິດຂ້ານ້ອຍເຖີດ."
[5]ພຣະຢາເວຊົງມີພຣະຄຸນແລະຊົງຍຸຕິທັມ; ພຣະເຈົ້າ, ຂອງເຮົາທັງຫລາຍຊົງພຣະກາຣຸນາ.[6]ພຣະຢາເວຊົງປົກປ້ອງຄົນຮູ້ນ້ອຍໄວ້; ເມື່ອຂ້ານ້ອຍ
ຕົກຕໍ່າ, ແລະພຣະອົງໄດ້ຊົງຊ່ວຍຂ້ານ້ອຍໃຫ້ພົ້ນ.
[7]ດວງວິນຍານຂອງຂ້າເອີຍຈົ່ງກັບໄປສູ່ທີ່ພັກຂອງເຈົ້າເຖີດ, ເພາະພຣະຢາເວຊົງດີຕໍ່ເຈົ້າແລ້ວ.[8]ເພາະພຣະອົງຊົງຊ່ວຍຂ້ານ້ອຍຈາກຄວາມຕາຍ,
ຊ່ວຍລະງັບນ້ຳຕາຂ້ານ້ອຍ, ແລະຊ່ວຍຕີນຂ້ານ້ອຍຈາກການສະດຸດ.
[9]ຂ້ານ້ອຍຈະຮັບໃຊ້ພຣະຢາເວ ໃນດິນແດນຂອງຄົນເປັນ.[10]ຂ້ານ້ອຍໄດ້ເຊື່ອໃນພຣະອົງຢູ່ ແມ່ນເມື່ອຂ້ານ້ອຍກ່າວວ່າ, "ຂ້ານ້ອຍທຸກຍາກຍິ່ງ
ຫນັກ"[11]ຂ້ານ້ອຍກ່າວໃນເວລາຕົກໃຈວ່າ, “ມະນຸດທຸກຄົນເປັນຄົນຫລອກລວງ.”
[12]ຂ້ານ້ອຍຈະເອົາຫຍັງຕອບແທນພຣະຢາເວ ສຳຫລັບຄວາມດີທັງຫມົດຂອງພຣະອົງທີ່ມີຕໍ່ຂ້ານ້ອຍ?[13]ຂ້ານ້ອຍຈະຍົກຖ້ວຍແຫ່ງຄວາມພົ້ນ,
ແລະຮ້ອງອອກພຣະນາມຊື່ພຣະຢາເວ.[14]ຂ້ານ້ອຍຈະແກ້ບົນແດ່ພຣະຢາເວ ຕໍ່ຫນ້າປະຊາຊົນທັງປວງຂອງພຣະອົງ.[15]ຄວາມຕາຍແຫ່ງໄພ່ພົນ
ຂອງພຣະອົງມີຄ່າຫລາຍຍິ່ງໃນສາຍພຣະເນດຂອງພຣະຢາເວ.
[16]ຂ້າແດ່ພຣະຢາເວ, ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ, ເປັນຜູ້ບົວລະບັດຮັບໃຊ້ຂອງພຣະອົງ, ເປັນລູກຊາຍຂອງທາດຂອງພຣະອົງ. ພຣະອົງ
ໄດ້ຊົງຖອດໂສ້ລ່າມທັງຫລາຍຂອງຂ້ານ້ອຍ.[17]ຂ້ານ້ອຍຈະຖວາຍເຄື່ອງບູຊາຂອບພຣະຄຸນແດ່ພຣະອົງ ແລະຮ້ອງອອກພຣະນາມຊື່ພຣະຢາເວ.
[18]ຂ້ານ້ອຍຈະຖວາຍຕາມທີ່ໄດ້ສັນຍາແດ່ພຣະຢາເວ ຕໍ່ຫນ້າປະຊາຊົນທັງປວງຂອງພຣະອົງ,[19]ໃນລານຕ່າງໆ ແຫ່ງພຣະວິຫານຂອງພຣະຢາເວ,
ໃນທ່າມກາງກຸງເຢຣູຊາເລັມ, ຈົ່ງສັນຣະເສີນພຣະຢາເວເຖີດ.

117 [1]ປະຊາຊົນທັງຫມົດເອີຍ, ຈົ່ງສັນຣະເສີນພຣະຢາເວເຖີດ, ຊົນຊາດທັງປວງເອີຍ ຈົ່ງຍົກຍ້ອງພຣະອົງເຖີດ. [2]ເພາະຄວາມຊື່ສັດແຫ່ງຄຳສັນ
ຍາຂອງພຣະອົງທີ່ມີຕໍ່ພວກເຮົານັ້ນໃຫຍ່ຍິ່ງຫນັກ, ແລະຄວາມຫນ້າເຊື່ອຖືຂອງພຣະຢາເວດຳຣົງເປັນນິດ. ຈົ່ງສັນຣະເສີນພຣະຢາເວ
ເຖີດ.


generated on Tue Jun 17 19:01:42 2025

118 [1]ຈົ່ງຂອບພຣະຄຸນພຣະຢາເວ, ເພາະພຣະອົງປະເສີດ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.[2]ໃຫ້ອິສະຣາເອນ
ກ່າວເຖີດວ່າ, "ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ."

[3]ໃຫ້ເຊື້ອສາຍອາໂຣນກ່າວເຖີດວ່າ, "ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ."[4]ໃຫ້ບັນດາຜູ້ທີ່ຕິດຕາມຢ່າງສັດຊື່ຕໍ່ພຣະຢາເວ,
ກ່າວເຖີດວ່າ, "ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ"
[5]ຂ້ານ້ອຍຮ້ອງຫາພຣະຢາເວຈາກຄວາມຄັບແຄ້ນໃຈ; ພຣະຢາເວໄດ້ຊົງຕອບຂ້ານ້ອຍແລະປຣະທານຄວາມໂລ່ງໃຈໃຫ້ແກ່ຂ້ານ້ອຍ.[6]ພຣະຢາ
ເວ ຊົງຢູ່ຝ່າຍຂ້ານ້ອຍ; ຂ້ານ້ອຍບໍ່ຢ້ານມະນຸດ; ຈະເຮັດຫຍັງແກ່ຂ້ານ້ອຍໄດ້?[7]ພຣະຢາເວ, ຊົງຢູ່ຝ່າຍຂ້ານ້ອຍປຽບດັ່ງຜູ້ຊ່ວຍຊູຂອງຂ້ານ້ອຍ;
ດັ່ງນັ້ນຂ້ານ້ອຍຈະເບິ່ງເຫັນຊັຍຊະນະຕໍ່ຜູ່ກຽດຊັງຂ້ານ້ອຍ.
[8]ການໄວ້ວາງໃຈໃນພຣະຢາເວ ກໍດີກວ່າວາງໃຈໃນມະນຸດ.[9]ເຂົ້າລີ້ພັຍຢູ່ໃນພຣະຢາເວ ກໍດີກວ່າວາງໃຈໃນບັນດາເຈົ້າເມືອງ.
[10]ປະຊາຊາດທັງຫມົດໄດ້ອ້ອມຂ້ານ້ອຍ; ໃນພຣະນາມຊື່ພຣະຢາເວ.ຂ້ານ້ອຍໄດ້ທໍາລາຍພວກເຂົາ.[11]ເຂົາທັງຫລາຍໄດ້ອ້ອມຂ້ານ້ອຍ; ຖືກຕ້ອງ
ແລ້ວ, ພວກເຂົາໄດ້ອ້ອມຂ້ານ້ອຍທຸກດ້ານ; ໃນພຣະນາມຊື່ພຣະຢາເວ ຂ້ານ້ອຍທໍາລາຍພວກເຂົາ.[12]ພວກເຂົາໄດ້ອ້ອມຂ້ານ້ອຍຄືຝູງເຜິ້ງ; ພວກ
ເຂົາໄດ້ສູນສິ້ນໄປຢ່າງໄວຄືໄຟໄຫມ້ກາງພຸ່ມຫນາມ; ໃນພຣະນາມຊື່ພຣະຢາເວ ຂ້ານ້ອຍທໍາລາຍພວກເຂົາ.
[13]ພວກເຂົາໄດ້ໂຈມຕີຂ້ານ້ອຍເພື່ອກະແທກໃຫ້ຂ້ານ້ອຍລົ້ມລົງ, ແຕ່ພຣະຢາເວໄດ້ຊົງຊ່ວຍຊູຂ້ານ້ອຍ.[14]ພຣະຢາເວ ຊົງເປັນກໍາລັງ ແລະເປັນ
ຄວາມຊື່ນຊົມຍິນດີຂອງຂ້ານ້ອຍ, ແລະພຣະອົງຊົງເປັນຜູ້ຊ່ວຍກູ້ຂອງຂ້ານ້ອຍ.
[15]ມີສຽງຍິນດີແລະຊັຍໂຍຢູ່ໃນເຕັນຕ່າງໆ; ມືຂວາຂອງພຣະຢາເວຊົງມີຊັຍ.[16]ມືຂວາຂອງພຣະຢາເວ ຊົງເປັນທີ່ເຊີດຊູ; ມືຂວາຂອງພຣະຢາເວຊົງ
ມີຊັຍ.
[17]ຂ້ານ້ອຍຈະບໍ່ຕາຍ, ແຕ່ຂ້ານ້ອຍຈະເປັນຢູ່ ແລະປະກາດພຣະຣາຊກິດຂອງພຣະຢາເວ.[18]ພຣະຢາເວໄດ້ຊົງຕີສອນຂ້ານ້ອຍຢ່າງຫນັກ; ແຕ່ພຣະ
ອົງບໍ່ຊົງມອບຂ້ານ້ອຍໄວ້ກັບຄວາມຕາຍ.
[19]ຂໍເປີດປະຕູຄວາມຊອບທັມໃຫ້ຂ້ານ້ອຍ; ຂ້ານ້ອຍຈະເຂົ້າປະຕູນັ້ນ ແລະຂ້ານ້ອຍຈະຂອບພຣະຄຸນພຣະຢາເວ.[20]ນີ້ຄືປະຕູຂອງພຣະຢາເວ; ຄົນ
ຊອບທັມຈະເຂົ້າໄປທາງນັ້ນ.[21]ຂ້ານ້ອຍຈະຂອບພຣະຄຸນ ພຣະອົງ, ເພາະພຣະອົງຊົງຕອບຂ້ານ້ອຍ, ແລະພຣະອົງຊົງເປັນຄວາມພົ້ນຂອງຂ້າ
ນ້ອຍ.
[22]ຫີນຊຶ່ງຊ່າງກໍໄດ້ຖິ້ມ ໄດ້ເປັນຫີນມຸມເອກແລ້ວ.[23]ສິ່ງນີ້ເປັນມາຈາກພຣະຢາເວ; ເປັນສິ່ງອັສະຈັນໃນສາຍຕາຂອງພວກເຮົາ.
[24]ມື້ນີ້ເປັນມື້ທີ່ພຣະຢາເວ ໄດ້ຊົງສ້າງ; ເຮົາຈະຊົມຊື່ນແລະຍິນດີໃນວັນນັ້ນ.[25]ຂໍຊົງໂຜດເຖີດພຣະເຈົ້າຂ້າ, ຂ້າແດ່ພຣະຢາເວ, ຂໍຊົງປຣະທານຊັຍ
ຊະນະແກ່ຂ້ານ້ອຍ, ຂໍຊົງປຣະທານຄວາມສໍາເລັດແກ່ຂ້ານ້ອຍທັງຫລາຍເຖີດ.
[26]ຜູ້ເຂົ້າມາໃນພຣະນາມຊື່ຂອງພຣະຢາເວກໍເປັນສຸກ; ພວກເຮົາອວຍພອນພວກທ່ານຈາກພຣະວິຫານຂອງພຣະຢາເວ.[27]ພຣະຢາເວຊົງເປັນພຣະ
ເຈົ້າ, ແລະພຣະອົງໄດ້ຊົງປຣະທານຄວາມສະຫວ່າງແກ່ພວກເຮົາ ຈົ່ງມັດເຄື່ອງຖວາຍບູຊາດ້ວຍເຊືອກກັບແທ່ນບູຊາ.[28]ພຣະອົງຊົງເປັນພຣະ
ເຈົ້າ, ຂອງຂ້ານ້ອຍ ແລະຂ້ານ້ອຍຈະຂອບພຣະຄຸນພຣະອົງ; ພຣະອົງຊົງເປັນພຣະເຈົ້າ, ຂອງຂ້ານ້ອຍ ຂ້ານ້ອຍຈະຍົກຍ້ອງພຣະອົງ.
[29]ໂອ, ຈົ່ງຂອບພຣະຄຸນພຣະຢາເວ; ເພາະພຣະອົງຊົງປະເສີດເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.

 generated on Tue Jun 17 19:01:42 2025

119 1ບັນດາຜູ້ທີ່ທາງຂອງເຂົາບໍ່ມີຄວາມຜິດນັ້ນກໍເປັນສຸກ ຄືຜູ້ທີ່ດຳເນີນຕາມຂໍ້ຄຳສັ່ງຂອງພຣະຢາເວ. 2ບັນດາຜູ້ທີ່ຮັກສາຄຳສັ່ງອັນຈິງຈັງຂອງ
ພຣະອົງກໍເປັນສຸກ ຄືຜູ້ທີ່ສະແຫວງຫາພຣະອົງດ້ວຍສຸດໃຈຂອງພວກເຂົາ.

3ພວກເຂົາບໍ່ເຮັດຜິດ ພວກເຂົາເດີນຕາມທາງຂອງພຣະອົງ. 4ພຣະອົງໄດ້ຊົງບັນຊາໃຫ້ພວກຂ້ານ້ອຍເຮັດຕາມຄຳສັ່ງສອນຂອງພຣະອົງ ເພື່ອວ່າ
ພວກຂ້ານ້ອຍຄວນປະຕິບັດຕາມຄຳສັ່ງສອນຢ່າງລະມັດຣະວັງ.
5ໂອ, ເພື່ອວ່າຂ້ານ້ອຍຈະໄດ້ຕັ້ງຢູ່ຢ່າງໝັ້ນຄົງໃນການປະຕິບັດຕາມກົດບັນຍັດທັງຫລາຍຂອງພຣະອົງ! 6ແລ້ວຂ້ານ້ອຍຈະບໍ່ອັບອາຍ ເມື່ອຂ້າ
ນ້ອຍຈົດຈໍ່ຢູ່ທີ່ຄຳສັ່ງສອນທັງໝົດຂອງພຣະອົງ.
7ຂ້ານ້ອຍຈະຂອບພຣະຄຸນພຣະອົງດ້ວຍໃຈທ່ຽງຕົງ ເມື່ອຂ້ານ້ອຍຮຽນຮູ້ຂໍ້ຄຳສັ່ງອັນຊອບທັມທັງຫລາຍຂອງພຣະອົງ. 8ຂ້ານ້ອຍຈະປະຕິບັດຕາມ
ກົດບັນຍັດທັງຫລາຍຂອງພຣະອົງ; ຂໍຢ່າຊົງຖິ້ມຂ້ານ້ອຍໄວ້ດຽວດາຍ. ເບັດ.
9ຄົນໜຸ່ມຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດ? ກໍໂດຍເຊື່ອຟັງ ພຣະດຳຣັດຂອງພຣະອົງ. 10ຂ້ານ້ອຍສະແຫວງຫາພຣະອົງດ້ວຍສຸດໃຈ;
ຂໍຢ່າໃຫ້ຂ້ານ້ອຍຫລົງໄປຈາກຂໍ້ຄຳສັ່ງທັງຫລາຍຂອງພຣະອົງ.
11ຂ້ານ້ອຍໄດ້ຮວບຮວມພຣະດຳຣັດຂອງພຣະອົງໄວ້ໃນໃຈ ເພື່ອຂ້ານ້ອຍຈະບໍ່ເຮັດບາບຕໍ່ພຣະອົງ. 12ສັນຣະເສີນແດ່ພຣະອົງ, ຂ້າແດ່ ພຣະຢາເວ;
ຂໍຊົງສອນກົດບັນຍັດທັງຫລາຍຂອງພຣະອົງແກ່ຂ້ານ້ອຍ.
13ຂ້ານ້ອຍໄດ້ປະກາດດ້ວຍປາກຂອງຂ້ານ້ອຍເຖິງບັນດາກົດໝາຍອັນຊອບທັມທັງສິ້ນທີ່ພຣະອົງໄດ້ຊົງສຳແດງໄວ້. 14ຂ້ານ້ອຍປິຕິຍິນດີໃນທາງ
ແຫ່ງກົດໝາຍທັງຫລາຍແຫ່ງສັນຍາຂອງພຣະອົງຫລາຍກວ່າຄວາມມັ່ງມີທັງໝົດ.
15ຂ້ານ້ອຍຈະຊອກຫາຄຳສັ່ງສອນທັງຫລາຍຂອງພຣະອົງ ແລະໃສ່ໃຈໃນທາງທັງຫລາຍຂອງພຣະອົງ. 16ຂ້ານ້ອຍປິຕິຍິນດີໃນກົດບັນຍັດທັງ
ຫລາຍຂອງພຣະອົງ; ຂ້ານ້ອຍຈະບໍ່ລືມພຣະດຳຣັດຂອງພຣະອົງ. ກິເມ.
17ຂໍຊົງເມດຕາຕໍ່ຜູ້ຮັບໃຊ້ຂອງພຣະອົງ ເພື່ອຂ້ານ້ອຍຈະມີຊີວິດຢູ່ ແລະປະຕິບັດຕາມພຣະດຳຣັດຂອງພຣະອົງ. 18ຂໍຊົງເປີດຕາຂ້ານ້ອຍ ເພື່ອຂ້າ
ນ້ອຍຈະເຫັນບັນດາສິ່ງອັສະຈັນໃນກົດບັນຍັດຂອງພຣະອົງ.
19ຂ້ານ້ອຍເປັນຄົນຕ່າງດ້າວເທິງແຜ່ນດິນ; ຂໍຢ່າຊົງເຊື່ອງກົດບັນຍັດທັງຫລາຍຂອງພຣະອົງຈາກຂ້ານ້ອຍ. 20ຄວາມປຣາຖນາຂອງຂ້ານ້ອຍກະ
ຫາຍທີ່ຈະຮຽນຮູ້ກົດບັນຍັດອັນຊອບທັມທັງຫລາຍຂອງພຣະອົງຕະຫລອດເວລາ.
21ພຣະອົງຊົງຕຳນິຄົນໂອຫັງ, ຄົນທີ່ຖືກສາບ, ຄືຜູ້ທີ່ຫລົງໄປຈາກກົດບັນຍັດທັງຫລາຍຂອງພຣະອົງ. 22ຂ້ານ້ອຍໄດ້ພົ້ນຈາກຄວາມອັບອາຍ ແລະ
ຂາຍໜ້າ, ເພາະຂ້ານ້ອຍໄດ້ເຊື່ອຟັງກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງ.
23ເຖິງແມ່ນວ່າພວກຜູ້ປົກຄອງນັ່ງປຶກສາກັນແລະໃສ່ຮ້າຍຂ້ານ້ອຍ, ແຕ່ຜູ້ຮັບໃຊ້ຂອງພຣະອົງຈະຊອກຫາກົດບັນຍັດທັງຫລາຍຂອງພຣະອົງ. 24ກົດ
ບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງຄົງເປັນຄວາມປິຕິຍິນດີຂອງຂ້ານ້ອຍ, ແລະສິ່ງເຫລົ່ານັ້ນເປັນເປັນທີ່ປຶກສາທັງຫລາຍຂອງຂ້ານ້ອຍ.
ດາເລ.
25ຊີວິດຂອງຂ້ານ້ອຍຕິດຢູ່ໃນຂີ້ຝຸ່ນ! ຂໍຊົງປຣະທານຊີວິດແກ່ຂ້ານ້ອຍໂດຍພຣະດຳຣັດຂອງພຣະອົງ. 26ຂ້ານ້ອຍໄດ້ບອກເຖິງທາງຂອງຂ້ານ້ອຍ,
ແລະພຣະອົງໄດ້ຊົງຕອບຂ້ານ້ອຍ, ຂໍຊົງສອນກົດບັນຍັດທັງຫລາຍຂອງພຣະອົງແກ່ຂ້ານ້ອຍ.
27ຂໍຊົງເຮັດໃຫ້ຂ້ານ້ອຍເຂົ້າໃຈບັນດາທາງແຫ່ງຄຳສັ່ງສອນທັງຫລາຍຂອງພຣະອົງ, ເພື່ອວ່າຂ້ານ້ອຍຈະຊອກຫາເຖິງຄຳສອນອັນອັສະຈັນຕ່າງໆ
ຂອງພຣະອົງ. 28ຂ້ານ້ອຍຈົມຢູ່ໃນຄວາມໂສກເສົ້າຢ່າງຍິ່ງ! ຂໍຊົງເສີມກຳລັງຂ້ານ້ອຍໂດຍພຣະດຳຣັດຂອງພຣະອົງເຖີດ.
29ຂໍຊົງຫັນຂ້ານ້ອຍໄປຈາກທາງຫລອກລວງ; ຂໍຊົງກະຣຸນາສອນກົດບັນຍັດຂອງພຣະອົງແກ່ຂ້ານ້ອຍ. 30ຂ້ານ້ອຍໄດ້ເລືອກທາງແຫ່ງຄວາມຊື່ສັດ;
ຂ້ານ້ອຍຮັກສາກົດບັນຍັດອັນຊອບທັມທັງຫລາຍຂອງພຣະອົງໄວ້ຕໍ່ໜ້າຂ້ານ້ອຍສະເໝີ.
31ຂ້ານ້ອຍຍຶດໝັ້ນຢູ່ກັບກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງ; ຂ້າແດ່ພຣະຢາເວ, ຂໍຢ່າໃຫ້ຂ້ານ້ອຍອັບອາຍ. 32ຂ້ານ້ອຍຈະແລ່ນໃນ
ທາງແຫ່ງຂໍ້ຄຳສັ່ງທັງຫລາຍຂອງພຣະອົງ, ເພາະພຣະອົງຊົງຂະຫຍາຍຈິດໃຈຂອງຂ້ານ້ອຍໃຫ້ກວ້າງທີ່ຈະກະທຳເຊັ່ນນັ້ນ. ເຮ.
33ຂ້າແດ່ພຣະຢາເວ, ຂໍຊົງສອນຂ້ານ້ອຍ, ເຖິງທາງແຫ່ງກົດບັນຍັດທັງຫລາຍຂອງພຣະອົງ, ແລະຂ້ານ້ອຍຈະຮັກສາໄວ້ຈົນເຖິງທີ່ສຸດ. 34ຂໍຊົງປຣະ
ທານຄວາມເຂົ້າໃຈແກ່ຂ້ານ້ອຍ, ແລະເພື່ອຂ້ານ້ອຍຈະຮັກສາກົດບັນຍັດຂອງພຣະອົງໄວ້; ແລະຂ້ານ້ອຍຈະປະຕິເສດຕາມດ້ວຍສຸດໃຈ.
35ຂໍຊົງນຳຂ້ານ້ອຍໄປໃນທາງແຫ່ງສັນຍາທັງຫລາຍຂອງພຣະອົງ, ເພາະຂ້ານ້ອຍຍິນດີທີ່ຈະເດີນໃນທາງນັ້ນ. 36ຂໍຊົງໂນ້ມໃຈຂ້ານ້ອຍເຂົ້າຫາກົດ
ບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງ ແລະອອກຫ່າງຈາກການໄດ້ມາຊຶ່ງບໍ່ຊອບທັມ.
37ຂໍຊົງຫັນສາຍຕາຂອງຂ້ານ້ອຍໄປຈາກການເບິ່ງເຫັນສິ່ງທີ່ໄຮ້ຄ່າ; ຂໍຊົງຮື້ຟື້ນຂ້ານ້ອຍໄວ້ໃນບັນດາທາງຂອງພຣະອົງ. 38ຂໍຊົງເຮັດຕາມພຣະສັນ
ຍາຂອງພຣະອົງຕໍ່ຜູ້ຮັບໃຊ້ຂອງພຣະອົງ ທີ່ພຣະອົງມີໄວ້ສຳລັບຜູ້ທີ່ຖວາຍກຽຕຂອງພຣະອົງ.
39ຂໍຊົງເອົາການເຢາະເຢີ້ຍຊຶ່ງຂ້ານ້ອຍກັງວົນນັ້ນອອກໄປ, ເພາະບັນດາຄຳຕັດສິນອັນຊອບທັມຂອງພຣະອົງນັ້ນປະເສີດ. 40ເບິ່ງເຖີດ, ຂ້ານ້ອຍໄດ້
ໂຫຍຫາຄສັ່ງສອນທັງຫລາຍຂອງພຣະອົງ; ຂໍຊົງຮື້ຟື້ນຂ້ານ້ອຍໃນຄວາມຊອບທັມຂອງພຣະອົງເຖີດ. ວາ.
41ຂ້າແດ່ພຣະຢາເວ, ຂໍປຣະທານຄວາມຮັກໝັ້ນຄົງຂອງພຣະອົງມາເຖິງຂ້ານ້ອຍ- ຄືຄວາມລອດຂອງພຣະອົງຕາມພຣະສັນຍາຂອງພຣະອົງ;
42ແລ້ວຂ້ານ້ອຍຈະມີຄຳຕອບໃຫ້ຜູ້ທີ່ເຢາະເຢີ້ຍຂ້ານ້ອຍ, ເພາະຂ້ານ້ອຍວາງໃຈໃນພຣະດຳຣັດຂອງພຣະອົງ.
43ຂໍຢ່າຊົງນຳພຣະດຳຣັດແຫ່ງຄວາມຈິງໄປຈາກປາກຂ້ານ້ອຍ, ເພາະຂ້ານ້ອຍໄດ້ລໍຖ້າບັນດາກົດບັນຍັດອັນຊອບທັມຂອງພຣະອົງ. 44ຂ້ານ້ອຍຈະ
ປະຕິບັດຕາມກົດບັນຍັດຂອງພຣະອົງ, ສະເໝີໄປເປັນນິຣັນ.
45ຂ້າພຣະອົງຈະເດີນຢ່າງໝັ້ນຄົງ, ເພາະຂ້ານ້ອຍໄດ້ສະແຫວງຫາຄຳສັ່ງສອນທັງຫລາຍຂອງພຣະອົງ. 46ຂ້ານ້ອຍຈະກ່າວເຖິງພຣະໂອວາດອັນ
ຈິງຈັງຂອງພຣະອົງຕໍ່ໜ້າບັນດາກະສັດ ແລະຈະບໍ່ຖືກເຮັດໃຫ້ອັບອາຍ.
47ຂ້ານ້ອຍປິຕິຍິນດີໃນຂໍ້ຄຳສັ່ງທັງຫລາຍຂອງພຣະອົງ, ຊຶ່ງຂ້ານ້ອຍຮັກ. 48ຂ້ານ້ອຍຈະຊູມືຂອງຂ້ານ້ອຍຂຶ້ນຕໍ່ຂໍ້ຄຳສັ່ງທັງຫລາຍຂອງພຣະອົງຊຶ່ງ
ຂ້ານ້ອຍຮັກ; ຂ້ານ້ອຍຈະຊອກຫາກົດໝາຍທັງຫລາຍຂອງພຣະອົງ. ຊາຢິນ.
49ຂໍຊົງຣະນຶກເຖິງບັນດາພຣະສັນຍາຂອງພຣະອົງທີ່ມີຕໍ່ຜູ້ຮັບໃຊ້ຂອງພຣະອົງ ເພາະພຣະອົງໄດ້ຊົງປຣະທານຄວາມຫວັງແກ່ຂ້ານ້ອຍ. 50ນີ້ຄືການ
ປອບໂຍນໃນຍາມທຸກຍາກຂອງຂ້ານ້ອຍ: ວ່າພຣະສັນຍາຂອງພຣະອົງນັ້ນໄດ້ຮັກສາຊີວິດຂອງຂ້ານ້ອຍໄວ້.

 generated on Tue Jun 17 19:01:42 2025

51ຄົນໂອຫັງເຢາະເຢີຍຂ້ານ້ອຍ, ສະນັ້ນຂ້ານ້ອຍບໍ່ໄດ້ຫັນອອກຈາກກົດບັນຍັດຂອງພຣະອົງ. 52ຂ້ານ້ອຍໄດ້ຄິດເຖິງກົດບັນຍັດທັງຫລາຍຂອງພຣະ
ອົງ ທີ່ມີມາແຕ່ການກ່ອນ, ຂ້າແດ່ພຣະຢາເວ, ແລະຂ້ານ້ອຍກໍປອບໂຍນຕົງເອງ.
53ຄວາມໃຈຮ້າຍອັນຮ້ອນແຮງໄດ້ເກາະຄຸມຂ້ານ້ອຍ ເນື່ອງຈາກຄົນຊົ່ວຜູ້ປະຕິເສດກົດບັນຍັດຂອງພຣະອົງ. 54ກົດຫມາຍທັງຫລາຍຂອງພຣະອົງ
ໄດ້ເປັນບົດເພງທັງຫລາຍຂອງຂ້ານ້ອຍ ໃນບ້ານທີ່ຂ້ານ້ອຍອາສັຍຢູ່ຊົ່ວຄາວ.
55ຂ້ານ້ອຍຄິດເຖິງພຣະນາມຊື່ຂອງພຣະອົງໃນຍາມຄ່ຳຄືນ, ຂ້າແດ່ພຣະຢາເວ, ແລະຂ້ານ້ອຍປະຕິບັດຕາມກົດບັນຍັດຂອງພຣະອົງ. 56ສິ່ງນີ້
ແຫລະທີ່ຂ້ານ້ອຍໄດ້ກະທຳ ເພາະຂ້ານ້ອຍໄດ້ປະຕິບັດຄຳສັ່ງສອນທັງຫລາຍຂອງພຣະອົງ. ຫັດ.
57ພຣະຢາເວແມ່ນທຸກສ່ວນຕ່າງໆ; ຂ້ານ້ອຍໄດ້ຕັ້ງໃຈທີ່ຈະປະຕິບັດຕາມພຣະດຳຣັດທັງຫລາຍຂອງພຣະອົງ. 58ຂ້ານ້ອຍວິງວອນຂໍຄວາມເມດຕາ
ຂອງພຣະອົງຢ່າງຮ້ອນຮົນດ້ວຍສຸດໃຈຂອງຂ້ານ້ອຍ; ຂໍຊົງກາຣຸນາແກ່ຂ້ານ້ອຍ, ຕາມດຳຣັດທີ່ພຣະອົງໄດ້ຊົງສັນຍາໄວ້.
59ຂ້ານ້ອຍໄດ້ກວດສອບບັນດາທາງຂອງຂ້ານ້ອຍ ແລະຂ້ານ້ອຍໄດ້ຫັນຕີນຂອງຂ້ານ້ອຍໄປຍັງບັນດາກົດບັນຍັດແຫ່ງສັນຍາຂອງພຣະອົງ. 60ຂ້າ
ນ້ອຍຮີບເຮັ່ງແລະບໍ່ໄດ້ຊັກຊ້າທີ່ຈະປະຕິບັດຕາມກົດບັນຍັດທັງຫລາຍຂອງພຣະອົງ.
61ແມ່ນເຊືອກທັງຫລາຍຂອງຄົນຊົ່ວໄດ້ດັກຂ້ານ້ອຍໄວ້; ຂ້ານ້ອຍກໍບໍ່ລືມກົດບັນຍັດຂອງພຣະອົງ. 62ຜທ່ຽງຄືນ ຂ້ານ້ອຍລຸກຂຶ້ນຂອບພຣະຄຸນພຣະ
ອົງ ເນື່ອງດ້ວຍກົດບັນຍັດອັນຊອບທັມທັງຫລາຍຂອງພຣະອົງ.
63ຂ້ານ້ອຍເປັນມິດກັບທຸກຄົນທີ່ຖວາຍກຽຕພຣະອົງ, ກັບຄົນທັງຫມົດທີ່ປະຕິບັດຕາມຄຳສັ່ງສອນທັງຫລາຍຂອງພຣະອົງ. 64ຂ້າແດ່ພຣະຢາເວ,
ແຜ່ນດິນໂລກ, ເຕັມດ້ວຍຄວາມຊື່ສັດແຫ່ງສັນຍາຂອງພຣະອົງ; ຂໍຊົງສອນກົດຫມາຍທັງຫລາຍຂອງພຣະອົງແກ່ຂ້ານ້ອຍ. ທິດ.
65ຂ້າແດ່ພຣະຢາເວ, ພຣະອົງໄດ້ຊົງເຮັດດີຕໍ່ຜູ້ຮັບໃຊ້ຂອງພຣະອົງ, ຕາມພຣະດຳຣັດຂອງພຣະອົງ. 66ຂໍຊົງສອນວິຈາຣະນາແລະຄວາມເຂົ້າໃຈ
ແກ່ຂ້ານ້ອຍຢ່າງຖ່ອງແທ້, ເພາະຂ້ານ້ອຍໄດ້ເຊື່ອໃນກົດບັນຍັດທັງຫລາຍຂອງພຣະອົງ.
67ເມື່ອກ່ອນຂ້ານ້ອຍໄດ້ທົນທຸກທໍຣະມານ, ຂ້ານ້ອຍໄດ້ຫລົງເຈີນໄປແຕ່ບັດນີ້ຂ້ານ້ອຍປະຕິບັດຕາມພຣະດຳຣັດຂອງພຣະອົງ. 68ພຣະອົງຊົງດີປະ
ເສີດ, ແລະພຣະອົງຄືຜູ້ນັ້ນທີ່ຊົງກະທຳການດີ; ຂໍຊົງສອນກົດຫມາຍທັງຫລາຍຂອງພຣະອົງແກ່ຂ້ານ້ອຍ.
69ຄົນໂອຫັງໄດ້ປ້າຍຄວາມບໍ່ຈິງໃສ່ຂ້ານ້ອຍ, ແຕ່ຂ້ານ້ອຍຮັກສາຄຳສັ່ງສອນທັງຫລາຍຂອງພຣະອົງດ້ວຍສຸດໃຈຂອງຂ້ານ້ອຍ. 70ຈິດໃຈຂອງພວກ
ເຂົາແຂ້ງກະດ້າງ, ແຕ່ຂ້ານ້ອຍປິຕິຍິນດີໃນກົດບັນຍັດຂອງພຣະອົງ.
71ດີແລ້ວທີ່ຂ້ານ້ອຍໄດ້ທຸກຍາກ ເພື່ອວ່າຂ້ານ້ອຍຈະໄດ້ຮຽນຮູ້ກົດຫມາຍທັງຫລາຍຂອງພຣະອົງ. 72ຄຳສັ່ງສອນຈາກປາກຂອງພຣະອົງສຳຫລັບ
ຂ້ານ້ອຍແລ້ວກໍມີຄ່າຍິ່ງກວ່າທອງຄຳແລະເງິນເປັນພັນໆແທ່ງ. ໂຢດ.
73ມືຂອງພຣະອົງໄດ້ຊົງສ້າງແລະໄດ້ຊົງຕົບແຕ່ງຂ້ານ້ອຍ, ຂໍຊົງປຣະທານຄວາມເຂົ້າໃຈແກ່ຂ້ານ້ອຍ. ເພື່ອຂ້ານ້ອຍຈະຮຽນຮູ້ກົດບັນຍັດທັງ
ຫລາຍຂອງພຣະອົງ. 74ບັນດາຜູ້ທີ່ຖວາຍກຽຕພຣະອົງຈະຍິນດີເມື່ອພວກເຂົາເຫັນຂ້ານ້ອຍ ເພາະວ່າຂ້ານ້ອຍພົບຄວາມຫວັງໃນພຣະດຳຣັດຂອງ
ພຣະອົງ.
75ຂ້າແດ່ພຣະຢາເວ, ຂ້ານ້ອຍຮູ້, ວ່າບັນດາກົດບັນຍັດຂອງພຣະອົງນັ້ນຖືກຕ້ອງແລ້ວ, ແລະໃນຄວາມຊື່ສັດນັ້ນທີ່ພຣະອົງໄດ້ຊົງໃຫ້ຂ້ານ້ອຍນັ້ນ
ທຸກຍາກ. 76ຂໍຄວາມຊື່ສັດແຫ່ງສັນຍາຂອງພຣະອົງປອບໂຍນຂ້ານ້ອຍ ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ກັບຜູ້ຮັບໃຊ້ຂອງພຣະອົງ.
77ຂໍຊົງສຳແດງຄວາມກາຣຸນາ ເພື່ອຂ້ານ້ອຍຈະມີຊີວິດຢູ່, ເພາະກົດບັນຍັດຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້ານ້ອຍ. 78ຂໍຊົງໃຫ້ຄົນໂອຫັງ
ອັບອາຍ ເພາະພວກເຂົາໄດ້ໃສ່ຮ້າຍຂ້ານ້ອຍ; ສ່ວນຂ້ານ້ອຍຈະຊອກຫາຄຳສັ່ງສອນທັງຫລາຍຂອງພຣະອົງ.
79ຂໍໃຫ້ບັນດາຜູ້ທີ່ຖວາຍພຣະກຽຕພຣະອົງຫັນກັບມາຫາຂ້ານ້ອຍຄືບັນດາຜູ້ທີ່ຮູ້ຈັກກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງນັ້ນ. 80ຂໍໃຫ້ໃຈ
ຂອງຂ້ານ້ອຍໄຮ້ຕຳນິດ້ວຍການເຄົາຣົບບັບຕິກົດຫມາຍທັງຫລາຍຂອງພຣະອົງ ດັ່ງນັ້ນຂ້ານ້ອຍຈະບໍ່ຕ້ອງຖືກເຮັດໃຫ້ອັບອາຍ. ກາດ.
81ຂ້ານ້ອຍຫມົດແຮງກັບການລໍຖ້າທີ່ພຣະອົງອາດຈະມາຊ່ວຍກູ້ຂ້ານ້ອຍ ຂ້ານ້ອຍໄດ້ຫວັງໃນພຣະດຳຣັດຂອງພຣະອົງ. 82ຕາຂອງຂ້ານ້ອຍຖ້າທີ່
ຈະເຫັນພຣະສັນຍາຂອງພຣະອົງ; ເມື່ອໃດທີ່ພຣະອົງຈະຊົງປອບໂຍນຂ້ານ້ອຍ?
83ເພາະຂ້ານ້ອຍໄດ້ເປັນເຫມືອນຖົງຫນັງເຫລົ້າອະງຸ່ນທີ່ຖືກຄຸມຄວັນ; ຂ້ານ້ອຍບໍ່ລືມກົດຫມາຍທັງຫລາຍຂອງພຣະອົງ. 84ຜູ້ຮັບໃຊ້ຂອງນ້ອຍຕ້ອງ
ທົນຢູ່ອີກດົນປານໃດ, ເມື່ອໃດທີ່ພຣະອົງຈະຊົງເຮັດການພິພາກສາພວກກົດຂີ່ຜູ້ຂົ່ມເຫັງຂ້ານ້ອຍ?
85ຄົນໂອຫັງໄດ້ຂຸດຫລຸມພາງດັກຂ້ານ້ອຍ, ຄືຄົນເຫລົ່ານັ້ນທີ່ຝ່າຝືນກັບກົດບັນຍັດຂອງພຣະອົງ. 86ບັນດາກົດບັນຍັດທັງຫມົດຂອງພຣະອົງກໍເຊື່ອຖື
ໄດ້, ຄົນເຫລົ່ານັ້ນຂົ່ມເຫັງຂ້ານ້ອຍຢ່າງບໍ່ຍຸຕິທັມ; ຂໍຊົງຊ່ວຍຂ້ານ້ອຍດ້ວຍເຖີດ.
87ພວກເຂົາເກືອບເຮັດໃຫ້ຂ້ານ້ອຍສູນສິ້ນໄປຈາກແຜ່ນດິນໂລກແລ້ວ,ແຕ່ຂ້ານ້ອຍບໍ່ປະຕິເສດຄຳສັ່ງສອນທັງຫລາຍຂອງພຣະອົງ. 88ດ້ວຍຄວາມ
ຮັກຫມັ້ນຄົງຂອງພຣະອົງ, ຂໍຊົງຮັກສາຊີວິດຂອງຂ້ານ້ອຍ, ເພື່ອທີ່ຂ້ານ້ອຍຈະໄດ້ເຊື່ອຟັງບັນດາພຣະບັນຊາຂອງພຣະອົງ. ລາເມດ.
89ຂ້າແດ່ພຣະຢາເວ, ພຣະດຳຣັດຂອງພຣະອົງຊົງດຳຣົງຢູ່ເປັນນິດ; ພຣະດຳຣັດຂອງພຣະອົງໄດ້ຕັ້ງຫມັ້ນຄົງໃນທ້ອງຟ້າ. 90ຄວາມຊື່ສັດຂອງພຣະ
ອົງດຳຣົງຢູ່ທຸກຊົ່ວຊາດ; ພຣະອົງໄດ້ຊົງສະຖາປະນາແຜ່ນດິນໂລກ, ແລະມັນກໍຍັງຄົງຢູ່.
91ທຸກສິ່ງເຫລົ່ານີ້ຕັ້ງຫມັ້ນຢູ່ຈົນທຸກວັນນີ້, ດັ່ງທີ່ພຣະອົງໄດ້ກ່າວໃນກົດບັນຍັດອັນຊອບທັມທັງຫລາຍຂອງພຣະອົງ, ເພາະທຸກສິ່ງເປັນຂອງບັນດາຜູ້
ຮັບໃຊ້ຂອງພຣະອົງ. 92ຖ້າກົດບັນຍັດຂອງພຣະອົງບໍ່ເປັນຄວາມປິຕິຍິນດີຂອງຂ້ານ້ອຍ, ຂ້ານ້ອຍຄົງໄດ້ພິນາດໄປໃນຄວາມທຸກຍາກແລ້ວ.
93ຂ້ານ້ອຍຈະບໍ່ມີທາງລືມຄຳສັ່ງສອນທັງຫລາຍຂອງພຣະອົງເລີຍ, ເພາະໂດຍຄຳສັ່ງສອນທັງຫລາຍເຫລົ່ານັ້ນ. 94ພຣະອົງໄດ້ຊົງຮັກສາຊີວິດຂ້າ
ນ້ອຍໄວ້, ຂ້ານ້ອຍເປັນຂອງພຣະອົງ, ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດ ເພາະຂ້ານ້ອຍສະແຫວງຫາຄຳສັ່ງສອນທັງຫລາຍຂອງພຣະອົງ.
95ຄົນຊົ່ວຕຣຽມທຳລາຍຂ້ານ້ອຍ, ແຕ່ຂ້ານ້ອຍຈະສະແຫວງຫາຄວາມເຂົ້າໃຈໃນກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງ. 96ຂ້ານ້ອຍໄດ້
ເຄີຍເຫັນມາແລ້ວວ່າທຸກສິ່ງມີຂີດຈຳກັດຂອງມັນ, ແຕ່ກົດບັນຍັດທັງຫລາຍຂອງພຣະອົງກວ້າງຂວາງໄຮ້ຂີດຈຳກັດ.
97ໂອ ຂ້ານ້ອຍຮັກກົດບັນຍັດຂອງພຣະອົງແທ້ໆ! ເປັນຄຳວິງວອນຂອງຂ້ານ້ອຍຕະຫລອດທັງວັນ. 98ກົດບັນຍັດທັງຫລາຍຂອງພຣະອົງເຮັດໃຫ້ຂ້າ
ນ້ອຍສະຫລາດກວ່າສັດຕຣູທັງຫລາຍຂອງຂ້ານ້ອຍ, ເພາະກົດບັນຍັດທັງຫລາຍຂອງພຣະອົງນັ້ນຢູ່ກັບຂ້ານ້ອຍສະເຫມີ.
99ຂ້ານ້ອຍມີຄວາມເຂົ້າໃຈຫລາຍກວ່າຄຣູທັງຫມົດຂອງຂ້ານ້ອຍ, ເພາະຂ້ານ້ອຍຊອກຫາກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງ. 100ຂ້າ
ນ້ອຍເຂົ້າໃຈຫລາຍກວ່າຜູ້ທີ່ອາຍຸໃຫຍ່ກວ່າຂ້ານ້ອຍ; ນີ້ເປັນເພາະຂ້ານ້ອຍໄດ້ຮັກສາຄຳສັ່ງສອນທັງຫລາຍຂອງພຣະອົງ.
101ຂ້ານ້ອຍຢັ້ງຕີນໄວ້ຈາກທາງຊົ່ວທຸກຢ່າງ ເພື່ອວ່າຂ້ານ້ອຍຈະປະຕິບັດຕາມພຣະດຳຣັດຂອງພຣະອົງ. 102ຂ້ານ້ອຍບໍ່ໄດ້ຫັນໄປຈາກບັນດາກົດບັນ
ຍັດອັນຊອບທັມຂອງພຣະອົງ, ເພາະພຣະອົງໄດ້ຊົງສອນຂ້ານ້ອຍ.

103ບັນດາພຣະດຳຣັດຂອງພຣະອົງນັ້ນຊ່າງມີຣົດຊາດຫວານແກ່ຂ້ານ້ອຍ, ແມ່ນລະ, ຫວານກວ່ານ້ຳເຜິ້ງເມື່ອເຖິງປາກຂອງຂ້ານ້ອຍ! 104ໂດຍທາງ
ຄຳສັ່ງສອນທັງຫລາຍຂອງພຣະອົງ, ຂ້ານ້ອຍສາມາດເຂົ້າໃຈໄດ້ ເພາະສະນັ້ນຂ້ານ້ອຍກຽດຊັງທາງທີ່ຜິດທັງຫລາຍ. ນັນ.
105ພຣະດຳຣັດຂອງພຣະອົງເປັນຕະກຽງແກ່ຕີນຂ້ານ້ອຍ ແລະເປັນຄວາມສະຫວ່າງແກ່ທາງຂອງຂ້ານ້ອຍ. 106ຂ້ານ້ອຍໄດ້ສາບານແລະໄດ້ຢືນຢັນ
ວ່າ, ຂ້ານ້ອຍຈະປະຕິບັດຕາມກົດບັນຍັດອັນຊອບທັມທັງຫລາຍຂອງພຣະອົງ.
107ຂ້າແດ່ພຣະຢາເວ; ຂ້ານ້ອຍທຸກຍາກຫລາຍ, ຂໍຊົງຮັກສາຊີວິດຂອງຂ້ານ້ອຍໄວ້. ຕາມທີ່ພຣະອົງໄດ້ສັນຍາດ້ວຍພຣະດຳຣັດຂອງພຣະອົງ.
108ຂ້າແດ່ພຣະຢເວ, ຂໍຊົງຮັບເຄື່ອງບູຊາຖວາຍດ້ວຍຄວາມສະມັກໃຈຈາກປາກຂອງຂ້ານ້ອຍ, ແລະຂໍຊົງສອນກົດບັນຍັດອັນຊອບທັມທັງຫລາຍ
ຂອງພຣະອົງແກ່ຂ້ານ້ອຍ.
109ແຕ່ສະນັ້ນຂ້ານ້ອຍບໍ່ລືມກົດບັນຍັດຂອງພຣະອົງ. 110ຄົນຊົ່ວໄດ້ວາງກັບດັກຂ້ານ້ອຍ, ແຕ່ຂ້ານ້ອຍບໍ່ຫັນເຫຈາກຄຳສັ່ງສອນທັງຫລາຍຂອງພຣະ
ອົງ.
111ຂ້ານ້ອຍຮັບກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງໄວ້ເປັນມໍຣະດົກຂອງຂ້ານ້ອຍເປັນນິດ, ເພາະສິ່ງເຫລົ່ານັ້ນເປັນຄວາມຊື່ນບານແກ່
ຈິດໃຈຂ້ານ້ອຍ. 112ຈິດໃຈຂອງຂ້ານ້ອຍເຊື່ອຫມັ້ນໃນກົດຫມາຍທັງຫລາຍຂອງພຣະອົງເປັນນິດຈົນເຖິງການອາວະສານ. ຊາເມັກ.
113ຂ້ານ້ອຍກຽດຊັງຄົນສອງໃຈ, ແຕ່ຂ້ານ້ອຍຮັກກົດບັນຍັດຂອງພຣະອົງ. 114ພຣະອົງຊົງເປັນທີ່ກຳບັງແລະເປັນໂລ້ຂອງຂ້ານ້ອຍ; ຂ້ານ້ອຍລໍຖ້າພ
ຣະດຳຣັດຂອງພຣະອົງ.
115ຈົ່ງໄປຈາກເຮົາ, ເຈົ້າຄົນເຮັດຊົ່ວ, ເພື່ອວ່າຂ້ານ້ອຍຈະໄດ້ເຮັດຕາມກົດບັນຍັດທັງຫລາຍຂອງພຣະອົງເຈົ້າຂອງຂ້ານ້ອຍ. 116ຂໍຊົງຄ້ຳຈູນຂ້ານ້ອຍ
ໄວ້ຕາມພຣະດຳຣັດຂອງພຣະອົງ ເພື່ອຂ້ານ້ອຍຈະມີຊີວິດຢູ່ ແລະບໍ່ອັບອາຍໃນຄວາມຫວັງຂອງຂ້ານ້ອຍ.
117ແລະຂ້ານ້ອຍຈະລອດ, ແລະຂ້ານ້ອຍຈະຊອກຫາກົດຫມາຍທັງຫລາຍຂອງພຣະອົງສະເຫມີ. 118ພຣະອົງຊົງປະຕິເສດທຸກຄົນທີ່ຫັນເຫຈາກກົດ
ຫມາຍທັງຫລາຍຂອງພຣະອົງ, ເພາະຄົນເຫລົ່ານັ້ນໄດ້ຫລອກລວງແລະເຊື່ອຖືບໍ່ໄດ້.
119ພຣະອົງຊົງຖິ້ມຄົນຊົ່ວທັງຫມົດຂອງແຜ່ນດິນໂລກເປັນຄືຂີ້ແຮ່; ເພາະສະນັ້ນຂ້ານ້ອຍຮັກພຣະໂອວາດອັນຈິງຈັງທັງຫລາຍຂອງພຣະອົງ. 120ຮ່າງ
ກາຍຂ້ານ້ອຍສັ່ນໃນຄວາມເກງກົວພຣະອົງ, ແລະຂ້ານ້ອຍຢຳເກງກົດຫມາຍອັນຊອບທັມທັງຫລາຍຂອງພຣະອົງ. ອາຍິນ.
121ຂ້ານ້ອຍເຮັດສິ່ງທີ່ຍຸຕິທັມແລະຖືກຕ້ອງ; ຂໍຢ່າຊົງຖິ້ມຂ້ານ້ອຍໄວ້ກັບຜູ້ກົດຂີ່ຂົ່ມເຫັງຂ້ານ້ອຍ. 122ຂໍຊົງຮັບປະກັນສະຫວັດດີພາບຜູ້ຮັບໃຊ້ຂອງພ
ຣະອົງ; ຂໍຢ່າຊົງໃຫ້ຄົນໂອຫັງກົດຂີ່ຂົ່ມເຫັງຂ້ານ້ອຍ.
123ສາຍຕາຂອງຂ້ານ້ອຍເມື່ອຍລ້າ ຂະນະທີ່ຂ້ານ້ອຍລໍຖ້າຄວາມລອດຂອງພຣະອົງ ແລະລໍຖ້າພຣະດຳຣັດອັນຊອບທັມຂອງພຣະອົງ. 124ຂໍຊົງສຳ
ແດງຄວາມຊື່ສັດແຫ່ງສັນຍາຂອງພຣະອົງແກ່ຜູ້ຮັບໃຊ້ຂອງ ພຣະອົງ, ແລະຂໍຊົງສອນກົດຫມາຍທັງຫລາຍຂອງພຣະອົງແກ່ຂ້ານ້ອຍ.
125ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ; ຂໍຊົງປຣະທານຄວາມເຂົ້າໃຈແກ່ຂ້ານ້ອຍ ເພື່ອຂ້ານ້ອຍຈະຮູ້ກົດບັນຍັດທັງຫລາຍແຫ່ງສັນຍາຂອງພຣະ
ອົງ. 126ເຖິງເວລາທີ່ພຣະຢາເວຈະຊົງຈັດການ, ເພາະປະຊາຊົນໄດ້ລະເມີດກົດບັນຍັດຂອງພຣະອົງ.
127ແນ່ນອນ ຂ້ານ້ອຍຮັກກົດບັນຍັດທັງຫລາຍຂອງພຣະອົງ, ຍິ່ງກວ່າທອງຄຳ ຍິ່ງກວ່າທອງບໍຣິສຸດ. 128ເພາະສະນັ້ນຂ້ານ້ອຍຈະຕິດຕາມຄຳສັ່ງ
ສອນທັງຫມົດຂອງພຣະອົງຢ່າງເຄັ່ງຄັດ, ແລະຂ້ານ້ອຍກຽດຊັງທາງແຫ່ງຄວາມຫລອກລວງທຸກທາງ. ເປ້.
129ບັນດາກົດລະບຽບຂອງພຣະອົງຫນ້າອັສະຈັນ, ນັ້ນຄືເຫດຜົນວ່າເປັນຫຍັງຂ້ານ້ອຍຈຶ່ງເຊື່ອຫມັ້ນໃນບັນດາກົດລະບຽບເຫລົ່ານັ້ນ. 130ການເປີດ
ເຜີຍພຣະດຳຣັດຂອງພຣະອົງໃຫ້ຄວາມສະຫວ່າງ; ທັງໃຫ້ຄວາມເຂົ້າໃຈແກ່ຄົນທີ່ຂາດປະສົບການ.
131ຂ້ານ້ອຍອ້າປາກແລະເມື່ອຍຫອບ, ເພາະຂ້ານ້ອຍປຣາຖນາກົດບັນຍັດທັງຫລາຍຂອງພຣະອົງ. 132ຂໍຊົງຫັນມາຫາຂ້ານ້ອຍແລະມີກະຣຸນາຕໍ່ຂ້າ
ນ້ອຍ, ເຊັ່ນດຽວກັບທີ່ພຣະອົງຊົງເຄີຍເຮັດຕໍ່ຜູ້ທີ່ຮັກພຣະນາມຊື່ຂອງພຣະອົງສະເຫມີ.
133ຂໍຊົງນຳຍ່າງຕີນຂອງຂ້ານ້ອຍຕາມພຣະດຳຣັດຂອງພຣະອົງ; ແຕ່ຂໍຢ່າຊົງໃຫ້ຄວາມບາບໃດໆ ມີອຳນາດເຫນືອຂ້ານ້ອຍ. 134ຂໍຊົງໄຖ່ຂ້ານ້ອຍ
ໃຫ້ພົ້ນການກົດຂີ່ຂົ່ມເຫັງຂອງມະນຸດ ເພື່ອຂ້ານ້ອຍຈະປະຕິບັດຕາມຄຳສັ່ງສອນທັງຫລາຍຂອງພຣະອົງ.
135ຂໍຊົງໃຫ້ມືຂອງພຣະອົງທໍແສງມາຍັງຜູ້ຮັບໃຊ້ຂອງພຣະອົງ ແລະຂໍຊົງສອນກົດຫມາຍທັງຫລາຍຂອງພຣະອົງແກ່ຂ້ານ້ອຍ 136ບັນດາສາຍທານ
ແຫ່ງນ້ຳຕາໄຫລລົງມາຈາກສາຍຕາຂອງຂ້ານ້ອຍ ເພາະປະຊາຊົນບໍ່ປະຕິບັດຕາມກົດບັນຍັດຂອງພຣະອົງ
137ຂ້າແດ່ພຣະຢາເວ, ພຣະອົງຊົງຊອບທັມ, ແລະກົດບັນຍັດຂອງພຣະອົງກໍທ່ຽງທັມ. 138ບັນດາກົດບັນຍັດທັງຫລາຍແຫ່ງສັນຍາທີ່ພຣະອົງໄດ້ຊົງ
ປຣະທານນັ້ນຊອບທັມ ແລະແທ້ຈິງ.
139ຄວາມຮ້າຍກາດໄດ້ທຳລາຍຂ້ານ້ອຍ ເພາະພວກສັດຕຣູຂອງຂ້ານ້ອຍລືມພຣະດຳຣັດທັງຫລາຍຂອງພຣະອົງ. 140ພຣະດຳຣັດຂອງພຣະອົງໄດ້
ຖືກທົດສອບຫລາຍ, ແລະຜູ້ຮັບໃຊ້ຂອງເຈົ້າຮັກສິ່ງນັ້ນ.
141ຂ້ານ້ອຍຕ່ຳຕ້ອຍແລະຖືກດູຫມິ່ນ, ແຕ່ຂ້ານ້ອຍບໍ່ລືມຄຳສັ່ງສອນທັງຫລາຍຂອງພຣະອົງ. 142ຄວາມຊອບທັມຂອງພຣະອົງຊອບທັມຖືກຕ້ອງຢູ່
ເປັນນິດ, ແລະກົດບັນຍັດຂອງພຣະອົງກໍເຊື່ອຖືໄດ້.
143ຄວາມທຸກຍາກແລະຄວາມຣະທົມຂົມຂື່ນໄດ້ມາສູ່ຂ້ານ້ອຍ, ກົດບັນຍັດທັງຫລາຍຂອງພຣະອົງຍັງຄົງເປັນຄວາມປິຕິຍິນດີຂອງຂ້ານ້ອຍ. 144ກົດ
ບັນຍັດທັງຫລາຍແຫ່ງສັນຍາຂອງພຣະອົງຊອບທັມເປັນນິດ; ຂໍຊົງປຣະທານຄວາມເຂົ້າໃຈແກ່ຂ້ານ້ອຍເພື່ອຂ້ານ້ອຍຈະມີຊີວິດຢູ່. ໂອບ.
145ຂ້ານ້ອຍໄດ້ຮ້ອງໄຫ້ອອກມາຈາກຫົວໃຈ," ຂໍຊົງຕອບຂ້ານ້ອຍ, ພຣະຢາເວ, ຂ້ານ້ອຍຈະຮັກສາກົດຫມາຍທັງຫລາຍຂອງພຣະອົງ. 146ຂ້ານ້ອຍຮ້ອງຫາພ
ຣະອົງ; ຂໍຊົງຊ່ວຍໃຫ້ຂ້ານ້ອຍປອດພັຍ, ແລະຄຳຄວນເຖິງພຣະດຳຣັດແຫ່ງພັນທະສັນຍາຂອງພຣະອົງ.
147ຂ້ານ້ອຍລຸກຂຶ້ນ ກ່ອນຮຸ່ງເຊົ້າແລະຮ້ອງຫາຄວາມຊ່ວຍເຫລືອ. ຂ້ານ້ອຍມີຄວາມຫວັງຢູ່ໃນພຣະຄັມ. 148ຕາຂອງຂ້ານ້ອຍເປີດອອກກ່ອນທີ່ກາງ
ຄືນຈະມາ ດັ່ງນັ້ນ,ຂ້ານ້ອຍຈະໄຕ່ຕອງພຣະຄັມຂອງພຣະອົງ.
149ສຽງຮ້ອງຂອງຂ້ານ້ອຍຢູ່ໃນຄວາມເຊື່ອແຫ່ງພັນທະສັນຍາ; ເຮັດໃຫ້ຂ້ອຍມີຊີວິດຢູ່, ພຣະຢາເວ, ດັ່ງທີ່ທ່ານໄດ້ສັນຍາໄວ້ໃນພຣະດຳຣັດຂອ
ງພຣະອົງ. 150ບັນດາຜູ້ທີ່ຖືກກການຂົ່ມເຫັງທັງຫລາຍກັບມາໃກ້ເຮົາ, ແຕ່ພວກເຂົາໄດ້ຫ່າງອອກກົດຫມາຍຂອງພຣະອົງ.
151ພຣະອົງຊົງຢູ່ໃກ້ຊິດຂ້ານ້ອຍ, ພຣະຢາເວ, ແລະພຣະບັດຂອງທ່ານກໍເປັນນັບຖື, 152ດົນນານມາແລ້ວ ຂ້ານ້ອຍໄດ້ຮຽນຮູ້ຈາກກົດບັນຍັດແຫ່ງ
ພັນທະສັນຍາຂອງພຣະອົງ. ເຣດ.
153ຂໍຊົງເບິ່ງຄວາມທຸກທໍຣະມານຂອງຂ້ານ້ອຍ ແລະຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນແນ່, ເພາະວ່າຂ້ານ້ອຍບໍ່ໄດ້ປະຖິ້ມກົດຫມາຍຂອງພຣະອົງ. 154ຂໍຊົງ
ໂຜດເປັນທະນາຍຄວາມແກ້ຄະດີໃຫ້ຂ້ານ້ອຍ, ແລະປ່ອຍຂ້ານ້ອຍໃຫ້ເປັນອິສຣະ, ໂຜດຊ່ວຍໃຫ້ພົ້ນຕາມທີ່ໄດ້ສັນຍາໄວ້ດ້ວຍ.

[155]ຄົນຊົ່ວຮ້າຍຈະບໍ່ໄດ້ຖືກຊ່ວຍກູ້ໃຫ້ພົ້ນພັຍ, ເພາະພວກເຂົາບໍ່ໄດ້ເຊື່ອຟັງກົດບັນຍັດຂອງພຣະອົງ.[156]ຄວາມເອັນດູຂອງພຣະອົງນັ້ນກໍຍິ່ງໃຫຍ່, ພຣະຢາເວ, ໂຜດສຳແດງຄວາມເມດຕາຂອງພຣະອົງ, ແລະຊ່ວຍໃຫ້ຂ້ານ້ອຍໄດ້ພົ້ນດ້ວຍເຖີດ.
[157]ສັດຕຣູ ແລະຜູ້ທີ່ຂົ່ມເຫັງນັ້ນມີຢູ່ຫລວງຫລາຍ, ແຕ່ຂ້ານ້ອຍບໍ່ໄດ້ລະເລີຍທີ່ຈະເຊື່ອຟັງກົດບັນຍັດຂອງພຣະອົງ. [158]ເມື່ອເບິ່ງຄົນທໍຣະຍົດນີ້ ກໍຫນ້າເບື່ອເຕັມທີ ເພາະວ່າເຂົາບໍ່ເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ.
[159]ພຣະອົງຮູ້ວ່າຂ້ານ້ອຍຮັກຂໍ້ຄຳສັ່ງຂອງພຣະອົງຫລາຍເທົ່າໃດ; ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດພົ້ນດ້ວຍເຖີດ, ພຣະຢາເວ, ຕາມທີ່ພຣະອົງໄດ້ຊົງສັນຍາໄວ້ໃນພັນທະສັນຍາແຫ່ງຄວາມສັດຊື່. [160]ແກ່ນແທ້ຂອງກົດບັຍັດລ້ວນແຕ່ເປັນຄວາມຈິງ; ການຕັດສິນອັນຍຸຕິທັມຂອງພຣະອົງກໍດຳຣົງຢູ່ສືບໄປເປັນນິດ. ຊິນ.
[161]ແມ່ນເຊື້ອກທັງຫລາຍຂອງຄົນຊົ່ວໄດ້ດັກຂ້ານ້ອຍໄວ້; ຫົວໃຈຂອງຂ້ານ້ອຍໄດ້ຖ່ອມຕົວລົງ, ຂ້ານ້ອຍກໍບໍ່ລືມກົດບັນຍັດຂອງພຣະອົງ.[162]ຂ້ານ້ອຍມີຄວາມສຸກເຫລືອຫລາຍ ດັ່ງຄົນທີ່ພົບຊັບສົມບັດມັ່ງຄັ່ງ.
[163]ຂ້ານ້ອຍກຽດຊັງການຕົວະຍົວະທຸກປະການ, ແຕ່ຂ້ານ້ອຍຮັກກົດບັນຍັດຂອງພຣະອົງ.[164]ຂ້ານ້ອຍໂມທະນາຂອບພຣະຄຸນພຣະອົງມື້ຫນຶ່ງເຈັດເທື່ອ ຍ້ອນການຕັດສິນອັນຍຸຕິທັມຂອງພຣະອົງ.
[165]ຄົນທີ່ຮັກກົດບັນຍັດກໍມີຄວາມປອດພັຍດີ ແລະບໍ່ມີສິ່ງໃດເຮັດໃຫ້ພວກເຂົາລົ້ມລົງໄດ້.[166]ຂ້ານ້ອຍລໍຖ້າພຣະອົງມາໂຜດຊ່ວຍໃຫ້ພົ້ນພັຍ, ພຣະຢາເວ, ແລະຂ້ານ້ອຍຈຶ່ງໄດ້ເຮັດຕາມຂໍ້ຄຳສັ່ງຂອງພຣະອົງ.
[167]ຈິດວິນຍານຂອງຂ້ານ້ອຍເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ, ແລະຮັກຄຳສັ່ງສອນນັ້ນຢ່າງສຸດຈິດສຸດໃຈ. [168]ຂ້ານ້ອຍຂັບຕາມຂໍ້ຄຳສັ່ງຂອງພຣະອົງ ແລະຄຳແນະນຳຂອງພຣະອົງ, ເພາະພຣະອົງຊົງເຫັນທຸກສິ່ງທີ່ຂ້ານ້ອຍໄດ້ເຮັດນັ້ນ.
[169]ຂໍຊົງໂຜດຟັງສຽງຮ້ອງໄຫ້ຂໍຄວາມຊ່ວຍເຫລືອຂອງຂ້ານ້ອຍດ້ວຍເຖີດ, ພຣະຢາເວ; ໂຜດໃຫ້ຂ້ານ້ອຍເຂົ້າໃຈໃນຖ້ອຍຄຳຂອງພຣະອົງດ້ວຍເຖີດ. [170]ຂ້ານ້ອຍຈະຍ້ອງຍໍສັນຣະເສີນພຣະອົງຕະລອດໄປ; ໂຜດຊ່ວຍຂ້ານ້ອຍ, ຕາມທີ່ໄດ້ຊົງສັນຍາຕາມຖ້ອຍຄຳຂອງພຣະອົງດ້ວຍ.
[171]ຂ້ານ້ອຍຈະຍ້ອງສັນຣະເສີນພຣະອົງຕະລອດໄປ, ເພາະພຣະອົງສັ່ງສອນໃຫ້ຂ້ານ້ອຍຮູ້ກົດບັນຍັດຂອງພຣະອົງ.[172]ຂ້າຈະຮ້ອງເພງທີ່ກ່າວເຖິງກົດບັນຍັດ, ເພາະຂໍ້ຄຳສັ່ງຂອງພຣະອົງຖືກຕ້ອງແລະທ່ຽງທັມ.
[173]ຂໍມືຂອງພຣະອົງມາຊ່ວຍຂ້ານ້ອຍດ້ວຍເຖີດ, ເພາະຂ້ານ້ອຍໄດ້ເລືອກທີ່ຈະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ.[174]ຂ້ານ້ອຍຄອງຄອຍການໂຜດມາຊ່ວຍຂອງພຣະອົງ, ພຣະຢາເວ, ແລະພຣະບັນຍັດຂອງພຣະອົງເປັນຄວາມສຸກຂອງຂ້ານ້ອຍ.
[175]ຂໍຊົງໂຜດຮັກສາຊີວິດຂອງຂ້ານ້ອຍໄວ້ດ້ວຍ, ແລະຂໍໃຫ້ຄຳແນະນຳຂອງພຣະອົງ ຊ່ວຍຊູຂ້ານ້ອຍດ້ວຍ.[176] ຂ້ານ້ອຍຫລົງທາງດັ່ງທີ່ແກະໄດ້ຫລົງທາງໄປ; ຂໍຊົງຊອກຫາຂ້ານ້ອຍແນ່ຖ້ອນ, ເຫມືອນດັ່ງຊອກຫາຜູ້ຮັບໃຊ້ຂອງພຣະອົງ, ເພາະຂ້ານ້ອຍບໍ່ໄດ້ປະຖິ້ມຂໍ້ຄຳສັ່ງຂອງພຣະອົງຈັກເທື່ອ.


generated on Tue Jun 17 19:01:42 2025

120 ບົດເພງຂອງເມເຊັກ.[1]ໃນຄວາມທຸກໃຈຂອງຂ້ານ້ອຍ ຂ້ານ້ອຍໄດ້ຮ້ອງຫາພຣະຢາເວ, ແລະພຣະອົງໄດ້ຊົງຕອບຂ້ານ້ອຍ ຂ້າແຕ່ພຣະຢາ
ເວ.[2]ຂໍຊົງຊ່ວຍກູ້ຊີວິດຂອງຂ້ານ້ອຍໃຫ້ພົ້ນຈາກພວກຄົນທີ່ຫລອກລວງດ້ວຍຮີບສົບປາກຂີ້ຕົວະຂອງພວກເຂົາ, ແລະການຫລອກລວງ
ດ້ວຍລີ້ນຂອງພວກເຂົາ.

[3]ພຣະອົງຈະລົງໂທດແກ່ພວກເຈົ້າ, ແລະພຣະອົງຈະຊົງເຮັດສິ່ງໃດແກ່ພວກເຈົ້າອີກ, ພວກເຈົ້າຜູ້ຊຶ່ງມີລີ້ນທີ່ຫລອກລວງ?[4]ພຣະອົງຈະຊົງລົງໂທດ
ພວກເຈົ້າດ້ວຍລູກທະນູຂອງນັກຮົບຊຶ່ງໄດ້ຄັດໃຫ້ແຫລມຄົມໂດຍການເຜົາດ້ວຍຖ່ານຂອງຕົ້ນຊາກ.
[5]ວິບັດແກ່ຂ້ານ້ອຍ ເພາະຂ້ານ້ອຍອາສັຍຊົ່ວຄາວກັບຄົນເມເຊັກ; ຂ້ານ້ອຍໄດ້ພັກຢູ່ທ່າມກາງເຕັນຂອງຄົນເຄດາ. [6]ຂ້ານ້ອຍພັກຢູ່ດົນເກີນໄປແລ້ວ
ກັບຜູ້ກຽດຊັງສັນຕິພາບ.[7]ຂ້ານ້ອຍຮັກສັນຕິພາບ, ແຕ່ເມື່ອຂ້ານ້ອຍເວົ້າ, ພວກເຂົາຈະເອົາແຕ່ເຮັດສົງຄາມ.

 generated on Tue Jun 17 19:01:42 2025

121 ບົດເພງຂອງເມເຊັກ.[1]ຂ້າພຣະອົງຈະເງີຍຫນ້າເບິ່ງຂຶ້ນໄປຍັງພູເຂົາ. ຄວາມຊ່ວຍເຫລືອຂອງຂ້ານ້ອຍຈະມາຈາກໃສ?[2]ຄວາມຊ່ວຍເຫລືອ
ຂອງຂ້ານ້ອຍມາຈາກພຣະຢາເວ, ຜູ້ຊົງສ້າງທ້ອງຟ້າແລະແຜ່ນດິນໂລກ.

[3]ພຣະອົງຈະບໍ່ຊົງເຮັດໃຫ້ຕີນຂອງທ່ານລື່ນໄຫລ; ພຣະອົງຜູ້ຊົງປົກປ້ອງທ່ານຈະບໍ່ຊົງເຄີ້ມຫລັບຫລືຊົງຫລັບສະຫນິດໄປ.[4]ເບິ່ງເຖີດ, ພຣະອົງຜູ້ຊົງ
ຮັກສາອິສະຣາເອນຈະບໍ່ຊົງເຄີ້ມຫລັບຫລືຊົງຫລັບສະຫນິດໄປ.
[5]ພຣະຢາເວຊົງເປັນຜູ້ພິທັກທ່ານ; ພຣະຢາເວຊົງເປັນຮົ່ມເງົາທີ່ຂວາມືຂອງທ່ານ.[6]ດວງຕາເວັນຈະບໍ່ເຮັດອັນຕະຣາຍທ່ານໃນເວລາກາງເວັນ, ຫລື
ດວງເດືອນກໍຈະບໍ່ເປັນອັນຕະຣາຍໃນເວລາກາງຄືນ.
[7]ພຣະຢາເວຈະຊົງປົກປ້ອງທ່ານໃຫ້ພົ້ນອັນຕະຣາຍທັງຫມົດ, ແລະພຣະອົງຈະຊົງປົກປ້ອງຊີວິດຂອງທ່ານ.[8]ພຣະຢາເວຈະຊົງປົກປ້ອງໃນທຸກສິ່ງທີ່
ທ່ານກະທຳຕັ້ງແຕ່ບັດນີ້ແລະສືບໄປເປັນນິດ.


generated on Tue Jun 17 19:01:42 2025

122 ບົດເພງຂອງເມເຊັດ, ຂອງດາວິດ.[1]ຂ້ານ້ອຍໄດ້ມີຄວາມຍິນດີ ເມື່ອພວກເຂົາໄດ້ກ່າວແກ່ຂ້ານ້ອຍວ່າ, "ຂໍໃຫ້ພວກເຮົາໄປຍັງພຣະວິຫານ
ຂອງພຣະຢາເວກັນເຖີດ."[2]ກຸງເຢຣູຊາເລັມເອີຍ; ຕີນທັງຫລາຍຂອງພວກເຮົາກຳລັງຢືນຢູ່ພາຍໃນປະຕູຂອງເຈົ້າ![3]ກຸງເຢຣູຊາເລັມ, ໄດ້ຖືກ
ສ້າງໄວ້ຢ່າງນະຄອນທີ່ວາງແຜນໄວ້ຢ່າງຮອບຄອບ!

[4]ບັນດາເຜົ່າຕ່າງໆ ຂຶ້ນໄປຍັງກຸງເຢຣູຊາເລັມ - ຄືບັນດາເຜົ່າຂອງພຣະຢາເວ - ດັ່ງເປັນສັກຂີພະຍານສຳລັບອິສະຣາເອນ, ເພື່ອຂອບພຣະຄຸນພ
ຣະນາມຊື່ຂອງພຣະຢາເວ.[5]ພຣະທີ່ນັ່ງແຫ່ງການພິພາກສາຕັ້ງຢູ່ທີ່ນັ້ນ, ຄືພຣະທີ່ນັ່ງຂອງຣາຊວົງດາວິດ.
[6]ຈົ່ງອະທິຖານຂໍຄວາມສະຫງົບສຸກໃຫ້ກຸງເຢຣູຊາເລັມວ່າ! "ຂໍບັນດາຜູ້ທີ່ຮັກເຈົ້າຈົ່ງມີຄວາມສະຫງົບສຸກ.[7]ຂໍຄວາມສະຫງົບສຸກຈົ່ງມີຢູ່ພາຍໃນ
ກຳແພງທັງຫລາຍທີ່ປ້ອງກັນເຈົ້າ ແລະຂໍໃຫ້ມີຄວາມປອດພັຍດີຢູ່ພາຍໃນປ້ອມຂອງເຈົ້າ."
[8]ເພື່ອເຫັນແກ່ພີ່ນ້ອງຊາຍຍິງແລະຫມູ່ເພື່ອນທັງຫລາຍຂອງເຮົາ ເຮົາຈະເວົ້າວ່າ, "ຂໍໃຫ້ຄວາມສະຫງົບສຸກຈົ່ງຢູ່ພາຍໃນເຈົ້າ."[9]ເພື່ອເຫັນແກ່ພ
ຣະວິຫານຂອງພຣະຢາເວພຣະເຈົ້າ, ຂອງພວກເຮົາ ເຮົາຈະສະແຫວງຫາຄວາມດີສຳລັບເຈົ້າ.


generated on Tue Jun 17 19:01:42 2025

123 ບົດເພງຂອງອາເຊັດ.[1]ຂ້າແດ່ພຣະອົງຜູ້ປຣະທັບໃນທ້ອງຟ້າ, ຂ້ານ້ອຍເງີຍຫນ້າເບິ່ງພຣະອົງ.[2]ເບິ່ງເຖີດ, ດວງຕາຂອງຄົນຮັບໃຊ້ ແນມເບິ່ງ
ມືນາຍຂອງພວກເຂົາ, ດວງຕາຂອງຍິງຮັບໃຊ້ ແນມເບິ່ງມືນາຍຍິງຂອງພວກນາງສັນໃດ, ດັ່ງນັ້ນດວງຕາທັງຫລາຍຂອງພວກເຮົາ
ກໍແນມເບິ່ງພຣະຢາເວພຣະເຈົ້າຂອງເຮົາ ຈົນກວ່າພຣະອົງຈະມີຄວາມເມດຕາຕໍ່ພວກເຮົາສັນນັ້ນ.

[3]ຂ້າແດ່ພຣະຢາເວ, ຂໍຊົງໂຜດເມດຕາຕໍ່ພວກຂ້ານ້ອຍ, ຂໍຊົງໂຜດເມດຕາຕໍ່ພວກຂ້ານ້ອຍເຖີດ. ເພາະພວກຂ້ານ້ອຍທົນຕໍ່ການຫມິ່ນປະຫມາດ
ຫລາຍແລ້ວ.[4]ຂ້ານ້ອຍທັງຫລາຍໄດ້ຮັບຄວາມເຢາະເຢີ້ຍຂອງຄົນອວດດີແລະການດູຖູກຂອງຄົນຈອງຫອງຫລາຍເກີນພໍແລ້ວ.


generated on Tue Jun 17 19:01:42 2025

124 ບົດເພງຂອງອາເຊັດ; ຂອງດາວິດ.[1]"ຖ້າພຣະຢາເວ ບໍ່ໄດ້ຊົງຢູ່ຝ່າຍພວກເຮົາ," ບັດນີ້ຂໍໃຫ້ອິສະຣາເອນກ່າວວ່າ,[2]"ຖ້າບໍ່ແມ່ນພຣະຢາເວ,
ຜູ້ໄດ້ຊົງຢູ່ຝ່າຍພວກເຮົາ ເມື່ອຄົນທັງຫລາຍໄດ້ລຸກຂຶ້ນຕໍ່ສູ້ພວກເຮົາ,[3]ເມື່ອຄວາມຄຽດແຄ້ນຂອງພວກເຂົາໄດ້ພຸ່ງຂຶ້ນຕໍ່ພວກເຮົາ ພວກ
ເຂົາກໍຈະກືນພວກເຮົາເສຍທັງເປັນ.

[4]ກະແສນ້ຳຄົງໄຫລຖ້ວມພວກເຮົາ; ແລ້ວນ້ຳກໍຄົງກວາດພວກເຮົາໄປ.[5]ແລ້ວນ້ຳທີ່ໄຫລແຮງຈະໄດ້ເຮັດໃຫ້ພວກເຮົາຈົມນ້ຳຕາຍ."
[6]ໃນທະນາຂອບພຣະຄຸນແດ່ພຣະຢາເວ, ຜູ້ບໍ່ໄດ້ຊົງຍອມໃຫ້ພວກເຮົາຖືກຈີກດ້ວຍແຂ້ວຂອງພວກເຂົາ.[7]ພວກເຮົາໄດ້ຫນີລອດໄປໄດ້ເຫມືອນຢ່າງ
ນົກ ພົ້ນຈາກກັບດັກຂອງບັນດາພານນົກ ກັບດັກນັ້ນກໍໄດ້ຫັກ ແລະພວກເຮົາໄດ້ຫນີລອດໄປໄດ້.
[8]ຄວາມຊ່ວຍເຫລືອຂອງພວກເຮົາຢູ່ໃນພຣະນາມຊື່ພຣະຢາເວ, ຜູ້ຊົງສ້າງທ້ອງຟ້າແລະແຜ່ນດິນໂລກ.


generated on Tue Jun 17 19:01:42 2025

125 ບົດເພງຂອງອາເຊັດ. [1]ບັນດາຜູ້ທີ່ໄວ້ວາງໃຈໃນພຣະຢາເວ, ກໍຄືພູເຂົາຊີໂອນ, ຊຶ່ງບໍ່ຫວັ່ນໄຫວ, ແຕ່ດຳຣົງຢູ່ເປັນນິດ. [2]ພູເຂົາຢູ່ອ້ອມນະ
ຄອນເຢຣູຊາເລັມ, ພຣະຢາເວ, ຊົງຢູ່ຮອບປະຊາຊົນຂອງພຣະອົງ ຕັ້ງແຕ່ບັດນີ້ສືບໄປເປັນນິດ. [3]ກະບອງຂອງຄວາມອະທັມຈະບໍ່ປົກຄອງ
ໃນແຜ່ນດິນຂອງຄົນຊອບທັມ. ບໍ່ສະນັ້ນແລ້ວຄົນຊອບທັມອາດຈະຍື່ນມືເຮັດສິ່ງທີ່ຜິດ.

[4]ຂ້າແດ່ພຣະຢາເວ, ຂໍຊົງເຮັດການດີຕໍ່ຄົນດີ, ແລະຕໍ່ຄົນທີ່ດວງໃຈທີ່ມີຄວາມສັດຊື່ຂອງພວກເຂົາ. [5]ແຕ່ສຳລັບຜູ້ທີ່ຫັນເຂົ້າຫາທາງຄົດໂກງຂອງ
ພວກເຂົາ, ພຣະຢາເວຈະຊົງພາພວກເຂົາໄປພ້ອມກັບຜູ້ເຮັດຊົ່ວທັງຫລາຍ. ຂໍສັນຕິສຸກຈົ່ງມີຢູ່ໃນອິສະຣາເອນ.

 generated on Tue Jun 17 19:01:42 2025

126 ບົດເພງຂອງອາເຊັດ.[1]ເມື່ອພຣະຢາເວໄດ້ຊົງຮື້ຟື້ນຊີໂອນກັບສູ່ສະພາບດີ, ພວກເຮົາກໍເປັນຄືຄົນເຫລົ່ານັ້ນທີ່ຝັນໄປ.

[2]ແລ້ວປາກຂອງພວກເຮົາກໍໄດ້ຫົວຂວັນເຕັມທີ່ ແລະລີ້ນຂອງພວກເຮົາໄດ້ຮ້ອງເພງ. ແລ້ວພວກເຂົາໄດ້ເວົ້າກັນທ່າມກາງປະຊາຊົນທັງຫລາຍວ່າ,
"ພຣະຢາເວໄດ້ຊົງກະທຳການອັນຍິ່ງໃຫຍ່ໃຫ້ພວກເຂົາ."[3]ພຣະຢາເວ, ໄດ້ຊົງກະທຳການອັນຍິ່ງໃຫຍ່ໃຫ້ພວກເຮົາ; ພວກເຮົາຊ່າງມີຄວາມຍິນ
ດີເຫລືອເກີນ.
[4]ຂ້າແດ່ພຣະຢາເວ, ຂໍຊົງຮື້ຟື້ນໃຫ້ຂ້ານ້ອຍທັງຫລາຍກັບສູ່ສະພາບດີ, ຢ່າງສາຍນ້ຳໄຫລຄືນມາສູ່ຫ້ວຍໃນເນເກບ.[5]ບັນດາເຫລົ່ານັ້ນທີ່ຫວ່ານ
ດ້ວຍນ້ຳຕາຈະໄດ້ເກັບດ້ວຍສຽງໂຫ່ຮ້ອງແຫ່ງຄວາມຍິນດີ.[6]ຜູ້ທີ່ຮ້ອງໄຫ້ອອກໄປ ໂດຍຫາບເມັດພືດເພື່ອຈະຫວ່ານ, ຈະກັບບ້ານດ້ວຍສຽງໂຫ່
ຮ້ອງແຫ່ງຄວາມຍິນດີ, ໂດຍຫາບຟ່ອນເຂົ້າມາພ້ອມກັບເຂົາດ້ວຍ.


generated on Tue Jun 17 19:01:42 2025

127 ບົດເພງຂອງອາເຊັດ, ຂອງໂຊໂລມອນ.[1]ຖ້າພຣະຢາເວ ບໍ່ກໍ່ບ້ານສ້າງເຮືອນ, ບັນດາຜູ້ກໍ່ສ້າງທັງຫມົດກໍບໍ່ມີປະໂຫຍດ, ຖ້າພຣະຢາເວບໍ່ໄດ້
ຊົງພິທັກເມືອງ, ຄົນຍາມທີ່ເຝົ້າຍາມກໍໃຊ້ການບໍ່ໄດ້.[2]ເປັນການເມື່ອຍເປົ່າທີ່ທ່ານລຸກຂຶ້ນແຕ່ເຊົ້າມືດ, ແລ້ວກັບບ້ານຈົນເດິກ, ຫລືກິນອາ
ຫານທີ່ໄດ້ຈາກເຮັດວຽກທໍາງານຫນັກ, ເພາະພຣະຢາເວ, ຈະຊົງປຣະທານແກ່ຜູ້ທີ່ພຣະອົງຊົງຮັກຂະນະທີ່ພວກເຂົານອນຫລັບ.

[3]ເບິ່ງເຖີດ, ລູກທັງຫລາຍເປັນມໍຣະດົກຈາກພຣະຢາເວ, ແລະພຣະພອນຂອງທ້ອງກໍເປັນລາງວັນຈາກພຣະອົງ.[4]ລູກທັງຫລາຍທີ່ເກີດເມື່ອພໍ່ຍັງ
ຫນຸ່ມ, ກໍຄືລູກທະນູໃນມືນັກຮົບ.[5]ຊາຍໃດມີລູກທະນູເຕັມແລ່ງກໍເປັນສຸກ. ເຂົາຈະບໍ່ຕ້ອງອັບອາຍເມື່ອເຂົາຕອບໂຕ້ບັນດາສັດຕຣູຂອງເຂົາທີ່ປະຕູ
ເມືອງ.

 generated on Tue Jun 17 19:01:42 2025

128 ບົດເພງຂອງອາເຊັດ.[1]ທຸກຄົນທີ່ຢ້ານຢຳພຣະຢາເວ, ກໍເປັນສຸກ ຄືຜູ້ທີ່ເດີນໃນທາງຂອງພຣະອົງ.[2]ສິ່ງທີ່ມືຂອງທ່ານໄດ້ຫາມາ, ທ່ານກໍຈະປີ
ຕິຍິນດີ; ແລະທ່ານຈະເປັນສຸກແລະມີຄວາມຈະເຣີນຂຶ້ນ.

[3]ເມຍຂອງເຈົ້າຈະເປັນຢ່າງຕົ້ນອະງຸ່ນພັນດີ ຫມາກດົກງາມ; ຢູ່ພາຍໃນບ້ານຂອງເຈົ້າ ລູກໆ ຂອງເຈົ້າຈະເປັນຄືບັນດາຕົ້ນຫມາກກອກ ຂະນະທີ່
ເຂົານັ່ງຢູ່ອ້ອມໂຕະຂອງເຈົ້າ.[4]ແມ່ນແລ້ວ, ແນ່ນອນຄົນທີ່ຖວາຍພຣະກຽດແດ່ພຣະຢາເວ, ຈະໄດ້ຮັບພຣະພອນ.[5]ຂໍພຣະຢາເວ, ຊົງອວຍພອນ
ເຈົ້າຈາກຊີໂອນ; ຂໍໃຫ້ເຈົ້າເຫັນຄວາມຈະເຣີນຮຸ່ງເຮືອງຂອງກຸງເຢຣູຊາເລັມ ຕະຫລອດວັນຄືນແຫ່ງຊີວິດຂອງເຈົ້າ.[6]ຂໍໃຫ້ເຈົ້າໄດ້ມີຊີວິດທີ່ຈະ
ເຫັນລູກຫລານຂອງເຈົ້າ. ຂໍໃຫ້ສັນຕິສຸກມີຢູ່ໃນອິສະຣາເອນ.


generated on Tue Jun 17 19:01:42 2025

129 ບົດເພງຂອງອາເຊັດ.[1]"ນັບຕັ້ງແຕ່ໄວໜຸ່ມຂອງຂ້ານ້ອຍພວກເຂົາກໍໄດ້ຂົ່ມເຫັງຂ້ານ້ອຍ," ໃຫ້ອິສະຣາເອນກ່າວເຖີດວ່າ.[2]"ນັບຕັ້ງແຕ່ວັຍ
ໜຸ່ມຂອງຂ້ານ້ອຍພວກເຂົາກໍໄດ້ຂົ່ມເຫັງຂ້ານ້ອຍ, ແຕ່ພວກເຂົາກໍຍັງເອົາຊະນະຂ້ານ້ອຍບໍ່ໄດ້.[3]ພວກເຂົາຂີດເທິງຫລັງ
ຂອງຂ້ານ້ອຍໃຫ້ເປັນຮອຍບາດແຜ; ໃຫ້ເປັນດັ່ງຮອຍດິນນາທີ່ຖືກໄຖແລ້ວ.

[4]ພຣະຢາເວເປັນອົງທີ່ຊອບທັມ; ພຣະອົງໄດ້ຊົງແກ້ເຊືອກມັດຂອງຄົນຊົ່ວອອກ."[5]ຂໍໃຫ້ທຸກຄົນທີ່ກຽດຊັງຊີໂອນຕ້ອງໄດ້ຮັບຄວາມອັບອາຍ,ແລະໄດ້
ຖອຍກັບໄປ.
[6]ຂໍໃຫ້ພວກເຂົາເປັນເຫມືອນຫຍ້າທີ່ງອກເທິງຫລັງຄາ ຊຶ່ງຫ່ຽວແຫ້ງໄປກ່ອນທີ່ມັນໃຫຍ່ຂຶ້ນ,[7]ຊຶ່ງຄົນເກັບກ່ຽວໄດ້ບໍ່ເຖິງກຳມື ຫລືບໍ່ພໍທີ່ຈະຮວບ
ມັດເປັນຟ່ອນໄວ້ໃນກຳມືຂອງຜູ້ກ່ຽວ.[8]ຂໍໃຫ້ຄົນທີ່ຜ່ານໄປເວົ້າວ່າ, "ຂໍພຣະພອນຂອງພຣະຢາເວ, ຊົງດຳຣົງຢູ່ກັບເຈົ້າທັງຫລາຍ ພວກເຮົາຂໍອວຍ
ພອນພວກເຈົ້າໃນພຣະນາມຊື່ຂອງພຣະຢາເວ."

 generated on Tue Jun 17 19:01:42 2025

130 ບົດເພງຂອງອາເຊັດ.[1]ຂ້າແດ່ພຣະຢາເວ, ຈາກທີ່ເລິກ, ຂ້ານ້ອຍຮ້ອງຫາພຣະອົງ.[2]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍຊົງຟັງສຽງຂອງຂ້ານ້ອຍ;
ຂໍງ່ຽງຫູຂອງພຣະອົງ ຟັງສຽງເອີ້ນຫາຂໍຄວາມເມດຕາຂອງຂ້ານ້ອຍ.

[3]ຂ້າແດ່ພຣະຢາເວ, ຖ້າພຣະອົງຈະຊົງບັນທຶກຄວາມຊົ່ວໄວ້, ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຜູ້ໃດຈະຢືນຢູ່ໄດ້?[4]ແຕ່ພຣະອົງຊົງມີການອະພັຍ ເພື່ອ
ຄົນຈະຢໍາເກງພຣະອົງ, ຂ້ານ້ອຍລໍຄອຍພຣະຢາເວ.
[5]ຂ້ານ້ອຍລໍຄອຍຖ້າພຣະຢາເວ, ຈິດໃຈຂອງຂ້ານ້ອຍລໍຄອຍຢ່າງຮ້ອນຮົນຢູ່, ແລະຂ້ານ້ອຍໄວ້ວາງໃຈໃນຖ້ອຍຄໍາຂອງພຣະອົງ.[6]ຈິດໃຈຂອງຂ້າ
ນ້ອຍລໍຖ້າອົງພຣະຜູ້ເປັນເຈົ້າ ຍິ່ງກວ່າຄົນຍາມລໍຄອຍຖ້າໃຫ້ເຖິງຮຸ່ງເຊົ້າ.
[7]ອິສະຣາເອນເອີຍ, ຈົ່ງວາງໃຈໃນພຣະຢາເວ, ພຣະຢາເວຊົງພຣະເມດຕາ, ແລະພຣະອົງຊົງເຕັມໃຈຢ່າງຍິ່ງທີ່ຈະຍົກໂທດໃຫ້.[8]ພຣະອົງຄືຜູ້ທີ່ຈະ
ຊົງໄຖ່ອິສະຣາເອນອອກຈາກບາບທັງຫມົດຂອງເຂົາ.

 generated on Tue Jun 17 19:01:42 2025

131 ບົດເພງຂອງອາເຊັດ; ຂອງດາວິດ.[1]ຂ້າແດ່ພຣະຢາເວ, ຈິດໃຈຂອງຂ້ານ້ອຍບໍ່ໄດ້ອວດຕົວ. ແລະຕາຂອງຂ້ານ້ອຍບໍ່ໄດ້ຈອງຫອງ ຂ້ານ້ອຍ
ບໍ່ໄດ້ມີຄວາມຫວັງທີ່ຍິ່ງໃຫຍ່ສຳລັບຕົວເອງຫລືກັງວົນໃນສິ່ງຕ່າງໆ ທີ່ເກີນຕົວຂອງຂ້ານ້ອຍ.

[2]ແຕ່ຂ້ານ້ອຍໄດ້ເຮັດໃຫ້ຈິດວິນຍານຂອງຂ້ານ້ອຍສະຫງົບແລະມິດ; ເຫມືອນເດັກຢ່ານົມຈາກແມ່ຂອງເຂົາ, ຈິດວິນຍານຂອງຂ້ານ້ອຍພາຍໃນ
ຕົວຂ້ານ້ອຍຄືຢ່າງເດັກທີ່ຢ່ານົມແລ້ວ.[3]ອິສະຣາເອນເອີຍ, ຈົ່ງຫວັງໃຈໃນພຣະຢາເວເຖີດ ຕັ້ງແຕ່ບັດນີ້ແລະສືບໄປເປັນນິດ.

 generated on Tue Jun 17 19:01:42 2025

132 ບົດເພງຂອງອາເຊັດ.[1]ຂ້າແດ່ພຣະຢາເວ, ຂໍຊົງຣະນຶກເຖິງດາວິດ ແລະຄວາມລໍາບາກທັງຫມົດຂອງເພິ່ນເຖີດ.[2]ຂໍຊົງຣະນຶກທີ່ເພິ່ນ ຊົງສາ
ບານຕໍ່ພຣະຢາເວໄວ້, ເຖິງສິ່ງທີ່ພະອົງຊົງສາບານໄວ້ກັບຜູ້ຊົງຣິດອໍານາດຂອງຢາໂຄບວ່າ.

[3]ພະອົງຊົງສາບານວ່າ, "ຂ້ານ້ອຍຈະບໍ່ເຂົ້າບ້ານ ຫລືເຂົ້າໄປເຖິງທີ່ນອນຂອງຂ້ານ້ອຍ,[4]ຂ້ານ້ອຍຈະບໍ່ໃຫ້ດວງຕາຂ້ານ້ອຍຫລັບຫລືພັກຜ່ອນ[5]ຈົນ
ກວ່າຂ້ານ້ອຍຈະຫາສະຖານທີ່ສໍາລັບພຣະເວໄດ້, ຄືຜາສາດຂອງອົງຜູ້ຊົງຣິດອໍານາດຂອງຢາໂຄບ."
[6]ເບິ່ງເຖີດ, ພວກຂ້ານ້ອຍໄດ້ຍິນເລື່ອງນີ້ໃນເອຟຣາທາ; ພວກຂ້ານ້ອຍໄດ້ພົບສິ່ງນີ້ໃນທົ່ງນາຂອງເຢອາຣິມພວກຂ້ານ້ອຍໄດ້ພົບຫີບນີ້.[7]ພວກຂ້າ
ນ້ອຍຈະໄປຍັງຜາສາດຂອງພຣະເຈົ້າ; ພວກຂ້ານ້ອຍຈະໄດ້ນະມັສະການທີ່ແທ່ນຮອງຕີນຂອງພຣະອົງ.[8]ຂ້າແດ່ພຣະຢາເວ, ຂໍຊົງລຸກຂຶ້ນ, ໄປຍັງ
ທີ່ປຣະທັບຂອງພຣະອົງ, ທັງພຣະອົງແລະຫີບແຫ່ງອານຸພາບຂອງພຣະອົງ!
[9]ຂໍໃຫ້ປະໂລຫິດຂອງພຣະອົງສວມຄວາມສັດຊື່; ແລະໃຫ້ຜູ້ຈົງຮັກພັກດີຂອງພຣະອົງໂຫ່ຮ້ອງດ້ວຍຄວາມຍິນດີ.[10]ເພາະເຫັນແກ່ດາວິດຜູ້ຮັບໃຊ້
ຂອງພຣະອົງ, ຂໍຢ່າເມີນຫນ້າຫນີຈາກກະສັດທີ່ໄດ້ຮັບການຊົງເຈີມຂອງພຣະອົງ.
[11]ພຣະຢາເວ, ໄດ້ຊົງສາບານກັບດາວິດ, ເປັນຄໍາສາບານຊຶ່ງພຣະອົງຈະບໍ່ຖອນຄືນຄໍາວ່າ: "ເຮົາຈະຕັ້ງຄົນຫນຶ່ງໃນເຊື້ອສາຍຂອງເຈົ້າໄວ້ເທິງບັນ
ລັງຂອງເຈົ້າ.[12]ຖ້າລູກຊາຍທັງຫລາຍຂອງເຈົ້າປະຕິບັດຕາມຄໍາສັນຍາ, ແລະຂໍ້ຄໍາສັ່ງຊຶ່ງເຮົາຈະສອນພວກເຂົາແລ້ວລູກທັງຫລາຍຂອງພວກເຂົາ
ຈະນັ່ງເທິງບັນລັງຂອງເຈົ້າເປັນນິດ."
[13]ພຣະຢາເວໄດ້ຊົງເລືອກຊີໂອນ, ພຣະອົງໄດ້ມີພຣະປະສົງຈະໃຫ້ເປັນທີ່ປະທັບຂອງພຣະອົງ.[14]"ນີ້ເປັນທີ່ຢູ່ອາສັຍຂອງເຮົາເປັນນິດ. ເຮົາຈະຢູ່ທີ່ນີ້,
ເພາະເຮົາປຣາຖນາເຊັ່ນນັ້ນ.
[15]ເຮົາຈະອວຍພອນຢ່າງຫລວງຫລາຍແກ່ອາຫານຂອງເມືອງນີ້. ເຮົາຈະໃຫ້ຄົນທຸກຈົນ ຂອງເມືອງນີ້ອີ່ມດ້ວຍອາຫານ.[16]ເຮົາຈະ
ອວຍພອນທຸກສິ່ງທີ່ປະໂລຫິດກະທໍາ, ຜູ້ຈົງຮັກພັກດີຂອງເມືອງນີ້ຈະຮ້ອງສຽງດັງດ້ວຍຄວາມຍິນດີ.
[17]ທີ່ນັ້ນເຮົາຈະເຮັດເຂົາອັນຫນຶ່ງງອກຂຶ້ນມາສໍາລັບດາວິດ ແລະຕັ້ງຕະກຽງດວງຫນຶ່ງສໍາລັບຜູ້ທີ່ເຮົາໄດ້ຫົດສົງໄວ້ຂອງເຮົາ.[18]ເຮົາຈະສວມຄວາມ
ອາຍແກ່ສັດຕຣູຂອງເຂົາ, ແຕ່ເຮົາຈະສວມລາວດ້ວຍມົງກຸດຊຶ່ງຈະເປັ່ງປະກາຍ."

 generated on Tue Jun 17 19:01:42 2025

133 ບົດເພງຂອງອາເຊັດ, ຂອງດາວິດ.[1] ເບິ່ງເຖີດ, ເປັນການດີແລະຫນ້າຊື່ນໃຈຫລາຍເທົ່າໃດ ທີ່ພີ່ນ້ອງອາສັຍຢູ່ດ້ວຍກັນ!

[2] ເຫມືອນນ້ຳມັນຢ່າງດີຢູ່ເທິງຫົວ ໄຫລລົງມາເທິງຫນວດເຄົາ-ຂອງອາໂຣນ, ແລະແລ້ວກໍໄຫລລົງມາເທິງຄໍເສື້ອຄຸມຂອງທ່ານ.[3] ເຫມືອນນ້ຳຄ້າງ
ແຫ່ງພູເຂົາເຮີໂມນ ຊຶ່ງຕົກລົງມາອາບພູເຂົາຊີໂອນ. ເພາະວ່າທີ່ນັ້ນ ພຣະຢາເວ, ໄດ້ສັນຍາເຖິງພຣະພອນຂອງພຣະອົງ - ຄືຊີວິດຍືນຍາວເປັນ
ນິດ.

 generated on Tue Jun 17 19:01:42 2025

134 ບົດເພງຂອງອາເຊັດ.[1] ມາເຖີດ, ມາຖວາຍສັນຣະເສີນຍ້ອງຍໍແດ່ພຣະຢາເວ, ທ່ານຜູ້ຮັບໃຊ້ທັງຫມົດຂອງພຣະຢາເວ, ທ່ານທັງຫລາຍຜູ້
ຊຶ່ງຮັບໃຊ້ໃນພຣະວິຫານຂອງພຣະຢາເວໃນຍາມຄໍ່າຄືນ.[2] ຈົ່ງຊູມືຂອງພວກທ່ານຂຶ້ນໄປຍັງສະຖານບໍຣິສຸດ ແລະຖວາຍສັນຣະເສີນແດ່ພ
ຣະຢາເວ.

[3] ຂໍພຣະຢາເວໄດ້ຊົງອວຍພອນທ່ານຈາກຊີໂອນ, ພຣະອົງຜູ້ຊຶ່ງໄດ້ຊົງສ້າງທ້ອງຟ້າແລະແຜ່ນດິນໂລກ.

 generated on Tue Jun 17 19:01:42 2025

135 [1]ຈົ່ງສັນຣະເສີນພຣະຢາເວ. ຈົ່ງສັນຣະເສີນພຣະນາມຊື່ຂອງພຣະຢາເວ. ຈົ່ງສັນຣະເສີນພຣະອົງເຖີດ,[2]ບັນດາຜູ້ຮັບໃຊ້ຂອງພຣະຢາເວ
ເອີຍ, ທ່ານທັງຫລາຍຜູ້ທີ່ຢູ່ໃນພຣະວິຫານຂອງພຣະຢາເວ, ໃນເດີ່ນພຣະວິຫານຂອງພຣະເຈົ້າ, ຂອງພວກເຮົາ.

[3]ຈົ່ງສັນຣະເສີນພຣະຢາເວ ເພາະພຣະອົງປະເສີດ ຈົ່ງຮ້ອງເພງສັນຣະເສີນພຣະນາມຊື່ຂອງພຣະອົງ ເພາະເປັນເລື່ອງທີ່ຫນ້າຍິນດີທີ່ຈະເຮັດເຊັ່ນ
ນັ້ນ[4]ເພາະພຣະຢາເວໄດ້ຊົງເລືອກຢາໂຄບໄວ້ສຳລັບພຣະອົງເອງແລະຊົງເລືອກອິສະຣາເອນເປັນກຳມະສິດຂອງພຣະອົງ.
[5]ຮູ້ວ່າອົງພຣະຜູ້ເປັນເຈົ້າ, ຂອງເຮົາຊົງເຫນືອກວ່າບັນດາພະເຈົ້າທັງຫມົດ.[6]ພຣະຢາເວຊົງພໍໃຈສິ່ງໃດ, ພຣະອົງກໍຊົງເຮັດສິ່ງນັ້ນ, ໃນທ້ອງຟ້າ
ແລະເທິງແຜ່ນດິນໂລກ ໃນທະເລແລະທີ່ເລິກຂອງມະຫາສະມຸດທັງຫມົດ.
[7]ພຣະອົງຊົງເຮັດໃຫ້ເມກລອຍຂຶ້ນມາຈາກທີ່ໄກໆ, ຊົງເຮັດໃຫ້ຟ້າແລບພຸ່ງເຂົ້າມາພ້ອມກັບຝົນແລະນຳລົມອອກຈາກຄັງຂອງພຣະອົງ.
[8]ພຣະອົງຊົງຂ້າລູກຫົວປີຂອງເອຢິບ, ທັງຂອງຄົນແລະຂອງສັດ.[9]ພຣະອົງຊົງສົ່ງຫມາຍສຳຄັນແລະການອັສະຈັນຕ່າງໆ, ມາທ່າມກາງເຈົ້າ ເອຢິບ
ເອີຍ, ເພື່ອຕໍ່ສູ້ຟາໂຣແລະຂ້າຣາຊການທັງຫມົດຂອງເຂົາ.
[10]ພຣະອົງໄດ້ຊົງໂຈມຕີປະຊາຊາດເປັນອັນຫລາຍ ແລະໄດ້ຂ້າບັນດາກະສັດຜູ້ມີອຳນາດ[11]ຄືສີໂຮນ ກະສັດຂອງຄົນອາໂມ ແລະໂອກ ກະສັດແຫ່ງ
ບາຊານ ອີກທັງຣາຊອານາຈັກທັງຫມົດແຫ່ງການາອານ.
[12]ພຣະອົງໄດ້ປຣະທານແຜ່ນດິນຂອງພວກເຂົາໃຫ້ເປັນມໍຣະດົກຂອງພວກເຮົາ, ເປັນມໍລະດົກແກ່ອິສະຣາເອນປະຊາຊົນຂອງພຣະອົງ.[13]ຂ້າແດ່ພ
ຣະຢາເວ, ພຣະນາມຊື່ຂອງພຣະອົງ, ດຳຣົງຢູ່ເປັນນິດ; ຂ້າແດ່ພຣະຢາເວ, ພຣະກຽດຕິຄຸນຂອງພຣະອົງດຳຣົງຢູ່ທຸກຊົ່ວເຊັ່ນອາຍຸ.
[14]ເພາະພຣະຢາເວຊົງປົກປ້ອງປະຊາຊົນຂອງພຣະອົງແລະຊົງເມດຕາຕໍ່ຜູ້ຮັບໃຊ້ຂອງພຣະອົງ.[15]ຮູບເຄົາຣົບຂອງບັນດາຊົນຊາດເປັນເງິນແລະທ
ອງຄຳ, ເປັນຜົນງານຂອງສີມືມະນຸດທັງຫລາຍ.[16]ຮູບເຄົາຣົບເຫລົ່ານັ້ນມີປາກ, ແຕ່ພວກມັນເວົ້າບໍ່ໄດ້, ພວກມັນມີຕາ, ແຕ່ພວກມັນເບິ່ງບໍ່ໄດ້.
[17]ພວກມັນມີຫູ, ແຕ່ພວກມັນຟັງບໍ່ໄດ້, ທັງບໍ່ມີລົມຫາຍໃຈໃນປາກຂອງຮູບເຄົາຣົບເຫລົ່ານັ້ນ.[18]ຜູ້ທີ່ເຮັດຮູບເຫລົ່ານັ້ນຈະເປັນຄືຮູບເຫລົ່ານັ້ນ, ເຊັ່ນ
ດຽວກັບທຸກຄົນທີ່ວາງໃຈໃນຮູບເຫລົ່ານັ້ນ.
[19]ເຊື້ອສາຍອິສະຣາເອນເອີຍ, ຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວ, ເຊື້ອສາຍອາໂຣນເອີຍ, ຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວເຖີ້ນ,.[20]ເຊື້ອ
ສາຍເລວີເອີຍຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວເຖີດ, ເຈົ້າຜູ້ຖວາຍກຽຕແດ່ພຣະຢາເວເອີຍ, ຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວເຖີ້ນ.
[21]ຈົ່ງຍ້ອງຍໍສັນຣະເສີນແດ່ພຣະຢາເວໃນຊີໂອນ, ຄືພຣະອົງຜູ້ຊົງປຣະທັບຢູ່ໃນກຸງເຢຣູຊາເລັມ. ຈົ່ງສັນຣະເສີນພຣະຢາເຖີດ.

 generated on Tue Jun 17 19:01:42 2025

136 1ໂອ, ຈົ່ງໂມທະນາຂອບພຣະຄຸນພຣະຢາເວ; ເພາະພຣະອົງຊົງປະເສີດ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
2ໂອ, ຈົ່ງໂມທະນາຂອບພຣະຄຸນພຣະອົງຜູ້ຊົງເປັນພຣະເຈົ້າຢູ່ເຫນືອພະເຈົ້າທັງຫລາຍ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາ
ຣົງເປັນນິດ.3ໂອ, ຈົ່ງໂມທະນາຂອບພຣະຄຸນອົງພຣະຜູ້ເປັນເຈົ້າ, ຜູ້ຊົງຢູ່ເຫນືອເຈົ້າທັງຫລາຍ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາ
ຣົງເປັນນິດ.

4ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງກະທໍາການອັສະຈັນຍິ່ງໃຫຍ່ທັງຫລາຍແຕ່ຜູ້ດຽວ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນ
ນິດ-5ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງສ້າງທ້ອງຟ້າ, ດ້ວຍຄວາມເຂົ້າໃຈ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
6ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງກາງແຜ່ນດິນໂລກອອກເຫນືອຫ້ວຍນ້ໍາທັງຫລາຍ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນ
ນິດ-7ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງສ້າງດວງສະຫວ່າງຂະຫນາດໃຫຍ່ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
8ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງສ້າງດວງອາທິດປົກຄອງກາງເວັນ,ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ-9ເພາະຄວາມຊື່
ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
10ພຣະອົງໄດ້ຂ້າບັນດາລູກຫົວປີຂອງເອຢິບ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ-11ແລະຊົງນໍາອິສະຣາເອນອອກມາ
ຈາກທ່າມກາງຄົນເອຢິບ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ-12ດ້ວຍມືອັນຊົງຣິດແລະແຂນທີ່ເຂັ້ມແຂງທີ່ຍົກຂູຂຶ້ນ,
ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
13ຈົ່ງຂອບພຣະຄຸນພຣະອົງ ຜູ້ໄດ້ຊົງແຍກທະເລແຫ່ງຕົ້ນກົກ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ ດໍາຣົງເປັນນິດ-14ແລະຊົງເຮັດໃຫ້ອິ
ສະຣາເອນຜ່ານໄປທ່າມກາງທະເລນັ້ນ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ, ດໍາຣົງເປັນນິດ-15ແຕ່ຊົງຂວ້າຟາໂຣແລະກອງທັບຂອງພະ
ອົງໃນທະເລຕົ້ນກົກ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
16ຈົ່ງຂອບພຣະຄຸນພຣະອົງ ຜູ້ຊົງນໍາປະຊາຊົນຂອງພຣະອົງຜ່ານຖິ່ນແຫ້ງແລ້ງກັນດານ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງ
ເປັນນິດ-17ພຣະອົງໄດ້ຂ້າກະສັດຜູ້ມີອໍານາດທັງຫລາຍ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
18ຈົ່ງຂອງພຣະຄຸນພຣະອົງຜູ້ຊົງຂ້າບັນດາກະສັດຜູ້ມີຊື່ສຽງ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ-19ຄືເຈົ້າສີໂຫນ ກະ
ສັດຂອງຄົນອາໂມ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ-20ແລະເຈົ້າໂອກ ກະສັດແຫ່ງບາຊານ, ເພາະຄວາມຊື່ສັດແຫ່ງ
ຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
21ຈົ່ງຂອບພຣະຄຸນພຣະອົງ, ຜູ້ຊົງປຣະທານແຜ່ນດິນຂອງພວກເຂົາໃຫ້ເປັນມໍຣະດົກ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ, ດໍາຣົງເປັ
ນນິດ -22ປຣະທານໃຫ້ເປັນມໍຣະດົກແກ່ອິສະຣາເອນຜູ້ຮັບໃຊ້ຂອງພຣະອົງ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.23ພ
ຣະອົງຊົງລະນຶກເຖິງແລະຊ່ວຍເຮົາຜູ້ຢູ່ໃນຖານະຕໍ່າຕ້ອຍ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.
24ຈົ່ງຂອບພຣະຄຸນພຣະອົງ, ຜູ້ຊົງຊ່ວຍເຮົາໃຫ້ລອດພົ້ນຈາກສັດຕຣູທັງຫລາຍ ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ, ດໍາຣົງເປັນ
ນິດ-25ພຣະອົງປຣະທານອາຫານແກ່ສິ່ງມີຊີວິດທັງປວງ, ເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ.26ໂອ ຈົ່ງຂອບພຣະຄຸນພ
ຣະເຈົ້າ, ແຫ່ງທ້ອງຟ້າເພາະຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງ ດໍາຣົງເປັນນິດ.


generated on Tue Jun 17 19:01:42 2025

137 [1]ໃກ້ແຄມນ້ຳແຫ່ງບາບີໂລນພວກຂ້ານ້ອຍໄດ້ນັ່ງລົງແລະຮ້ອງໄຫ້ເມື່ອພວກຂ້ານ້ອຍຣະນຶກເຖິງຊີໂອນ.[2]ທີ່ຕົ້ນຫລິວທັງຫລາຍ ທີ່ນັ້ນພວກ
ຂ້ານ້ອຍໄດ້ແຂວນພິນເຂົາຄູ່ຂອງພວກຂ້ານ້ອຍ.

[3]ທີ່ນັ້ນຜູ້ທີ່ຈັບພວກຂ້ານ້ອຍເປັນຊະເລີຍໄດ້ບອກໃຫ້, ພວກຂ້ານ້ອຍຮ້ອງເພງ ແລະຜູ້ທີ່ໄດ້ເຍາະເຍີ້ຍພວກຂ້ານ້ອຍ, "ຈົ່ງຮ້ອງເພງກ່ຽວກັບຊີໂອນ
ໃຫ້ພວກເຮົາຟັງແດ່."[4]ພວກເຮົາຈະຮ້ອງເພງຂອງພຣະຢາເວໄດ້ຢ່າງໃດທີ່ໃນແຜ່ນດິນຕ່າງດ້າວ? ກຸງເຢຣູຊາເລັມເອີຍ.
[5]ຖ້າເຮົາລະເລີຍຄວາມຊົງຈຳຂອງເຈົ້າ, ກໍຂໍໃຫ້ມືຂວາຂອງເຮົາລືມສີມືຂອງເຈົ້າ.[6]ຂໍໃຫ້ລີ້ນຂອງເຮົາເກາະຕິດເພດານປາກຂອງເຮົາ ຖ້າເຮົາບໍ່ຣະ
ນຶກເຖິງເຈົ້າອີກຕໍ່ໄປ, ຖ້າເຮົາບໍ່ໄດ້ຮັກກຸງເຢຣູຊາເລັມໄປຫລາຍກວ່າຄວາມຍິນດີສູງສຸດຂອງເຮົາ.
[7]ຂ້າແດ່ພຣະຢາເວ, ຂໍຊົງຣະນຶກເຖິງສິ່ງທີ່ພວກຄົນເອໂດມເຮັດໃນມື້ທີ່ກຸງເຢຣູຊາເລັມແຕກ. ພວກເຂົາໄດ້ເວົ້າວ່າ, "ຈົ່ງທຳລາຍມັນລົງ, ຈົນເຖິງ
ຖານຮາກຂອງມັນເລີຍ."
[8]ລູກສາວແຫ່ງບາບີໂລນເອີຍ, ເຈົ້າຈະຕ້ອງຖືກລ້າງຜານໃນໄວນີ້ - ໃຫ້ຜູ້ນັ້ນເປັນສຸກ, ຄືຜູ້ຊຶ່ງໄດ້ຕອບແທນເຈົ້າໃຫ້ສະສົມກັບສິ່ງທີ່ເຈົ້າໄດ້ເຮັດກັບ
ເຮົາ.[9]ໃຫ້ຜູ້ນັ້ນເປັນສຸກ, ຄືຜູ້ທີ່ເອົາແລະໂຍນລູກນ້ອຍຂອງເຈົ້າກະແທກລົງກັບກ້ອນຫີນ.

 generated on Tue Jun 17 19:01:42 2025

138 ບົດເພງສັນຣະເສີນຂອງດາວິດ.[1]ຂ້ານ້ອຍຈະຂອບພຣະຄຸນພຣະອົງດ້ວຍສຸດໃຈຂອງຂ້ານ້ອຍ; ຕໍ່ຫນ້າພະເຈົ້າທັງຫລາຍ ຂ້ານ້ອຍຈະຮ້ອງ
ເພງສັນຣະເສີນພຣະອົງ.[2]ຂ້ານ້ອຍຈະກາບລົງຍັງພຣະວິຫານບໍຣິສຸດຂອງພຣະອົງ ແລະຈະຂອບພຣະຄຸນພຣະນາມຊື່ຂອງພຣະອົງເພາະ
ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງແລະ. ຄວາມຫນ້າໄວ້ວາງໃຈໄດ້ຂອງພຣະອົງ ພຣະອົງໄດ້ຊົງເຊີດຊູເຮັດໃຫ້ຖ້ອຍຄໍາແລະພຣະນາມຊື່
ຂອງພຣະອົງສໍາຄັນຍິ່ງກວ່າສິ່ງໃດໆ. ເ

[3]ໃນມື້ທີ່ຂ້ານ້ອຍໄດ້ຮ້ອງຫາພຣະອົງ, ພຣະອົງໄດ້ຊົງຕອບຂ້ານ້ອຍ; ພຣະອົງໄດ້ຊົງໃຫ້ຈິດວິນຍານຂອງຂ້ານ້ອຍກ້າຫານແລະເຂັ້ມແຂງ.[4]ຂ້າແດ່
ພຣະຢາເວ, ກະສັດທັງຫລາຍແຫ່ງແຜ່ນດິນໂລກຈະຊົງຂອບພຣະຄຸນພຣະອົງ, ເພາະບັນດາກະສັດເຫລົ່ານັ້ນຈະໄດ້ຍິນຖ້ອຍຄໍາຈາກປາກຂອງ
ພຣະອົງ.
[5]ທ່ານເຫລົ່ານັ້ນຈະຮ້ອງເພງເຖິງກິຈະການຂອງພຣະຢາເວ, ເພາະສະຫງ່າຣາສີຂອງພຣະຢາເວນັ້ນໃຫຍ່ຍິ່ງ.[6]ເຖິງວ່າພຣະຢາເວຈະຢູ່ສູງສຸດ ພ
ຣະອົງກໍຍັງເຝົ້າເບິ່ງຄົນຕໍ່າຕ້ອຍ, ແຕ່ຄົນໂອຫັງພຣະອົງຊົງຮູ້ຈັກແຕ່ໄກແສນໄກໄດ້.
[7]ແມ່ນຂ້ານ້ອຍຍ່າງຢູ່ກາງອັນຕະຣາຍ, ພຣະອົງຈະຊົງຮັກສາຊີວິດຂ້ານ້ອຍໄວ້; ພຣະອົງຈະຍື່ນມືອອກຕໍ່ຕ້ານ ຄວາມໂຫດຮ້າຍຂອງສັດຕຣູທັງ
ຫລາຍຂອງຂ້ານ້ອຍ, ແລະມືຂວາຂອງພຣະອົງກໍຈະຊົງຊ່ວຍຂ້ານ້ອຍໃຫ້ພົ້ນ.[8]ພຣະຢາເວ, ຊົງສະຖິດຢູ່ກັບຂ້ານ້ອຍຈົນເຖິງທີ່ສຸດ; ຂ້າແດ່ພຣະ
ຢາເວ, ຄວາມຊື່ສັດແຫ່ງຄໍາສັນຍາຂອງພຣະອົງດໍາຣົງເປັນນິດ, ຂໍຢ່າຊົງປະຖິ້ມຜູ້ທີ່ພຣະອົງໄດ້ຊົງສ້າງຂຶ້ນດ້ວຍມືຂອງພຣະອົງນັ້ນເລີຍ.

 generated on Tue Jun 17 19:01:42 2025

139 ສຳລັບຄະນະນັກດົນຕຣີ. ບົດເພງສັນຣະເສີຂອງດາວິດ. [1]ຂ້າແດ່ພຣະຢາເວ, ພຣະອົງໄດ້ຊົງກວດສອບຂ້ານ້ອຍ, ແລະພຣະອົງຊົງຮູ້ຈັກ
ຂ້ານ້ອຍ. [2]ພຣະອົງຊົງຮູ້ເມື່ອ ຂ້ານ້ອຍນັ່ງລົງແລະເມື່ອຂ້ານ້ອຍລຸກຂຶ້ນ; ພຣະອົງຊົງເຂົ້າໃຈຄວາມຄິດຂອງຂ້ານ້ອຍໄດ້ແຕ່ໄກ.

[3]ພຣະອົງຊົງສັງເກດທາງເດີນຂອງຂ້ານ້ອຍ; ແລະການນອນຂອງຂ້ານ້ອຍ ພຣະອົງຊົງລຶ້ງເຄີຍກັບທາງທັງຫມົດຂອງຂ້ານ້ອຍ. [4]ຂ້າແດ່ພຣະຢາເວ,
ເພາະກ່ອນທີ່ຈະມີຄຳເວົ້າອອກມາ, ພຣະອົງກໍໄດ້ຊົງຮູ້ຄວາມຫມົດແລ້ວ. [5]ພຣະອົງຊົງອ້ອມຂ້ານ້ອຍຢູ່ທັງຂ້າງຫລັງແລະຂ້າງຫນ້າ ແລະຊົງວາງມື
ຂອງພຣະອົງເທິງຂ້ານ້ອຍ. [6]ຄວາມຮອບຮູ້ຢ່າງນີ້ຫລາຍເກີນໄປສຳລັບຂ້ານ້ອຍ; ສູງເກີນໄປ, ແລະຂ້ານ້ອຍບໍ່ອາດເອື້ອມເຖິງ.
[7]ຂ້ານ້ອຍຈະຫນີຈາກພຣະວິຫານຂອງພຣະອົງໄປທີ່ໃດໄດ້? ທີ່ໃດທີ່ຂ້ານ້ອຍຈະຫນີຈາກພຣະພັກຂອງພຣະອົງໄດ້ແດ່? [8]ຖ້າຂ້ານ້ອຍຂຶ້ນໄປຍັງ
ທ້ອງຟ້າ, ພຣະອົງກໍສະຖິດທີ່ນັ້ນ; ຖ້າຂ້ານ້ອຍຈະນອນໃນແດນຄົນຕາຍ ເບິ່ງເຖີດ, ພຣະອົງກໍຊົງຢູ່ທີ່ນັ້ນ.
[9]ຖ້າຂ້ານ້ອຍຈະບິນຫນີດ້ວຍປີກຂອງຮຸ່ງເຊົ້າແລະໄປອາສັຍຢູ່ໃນສ່ວນຂອງສຸດຂອບຂອງຟາກທະເລພຸ້ນ, [10]ແມ່ນທີ່ນັ້ນ ພຣະຫັດຂອງພຣະອົງຈະ
ຊົງຈູງຂ້ານ້ອຍ, ແລະພຣະຫັດຂວາຂອງພຣະອົງຈະຊ່ວຍຂ້ານ້ອຍໄວ້.
[11]ຖ້າຂ້ານ້ອຍໄດ້ເວົ້າວ່າ, "ຄວາມມືດຈະບັງເຮົາໄວ້, ແລະຄວາມສະຫວ່າງຮອບເຮົາຈະເປັນກາງຄືນ," [12]ແມ່ນຄວາມມືດກໍບໍ່ມືດສຳລັບພຣະອົງ.
ກາງຄືນກໍສະຫວ່າງຢ່າງກາງເວັນ, ເພາະທັງຄວາມມືດແລະຄວາມສະຫວ່າງເປັນຄືກັນສຳລັບພຣະອົງ.
[13]ພຣະອົງໄດ້ຊົງສ້າງຮ່າງກາຍໃນຂ້ານ້ອຍ; ພຣະອົງໄດ້ຊົງປະກອບຂ້ານ້ອຍເຂົ້າກັນໃນທ້ອງແມ່ຂອງຂ້ານ້ອຍ. [14]ຂ້ານ້ອຍຈະສັນຣະເສີນພຣະອົງ,
ເພາະພຣະອົງໄດ້ຊົງສ້າງຂ້ານ້ອຍຢ່າງອັສະຈັນ. ຈິດວິນຍານຂອງຂ້ານ້ອຍຮູ້ເລື່ອງນີ້ດີ.
[15]ກະດູກຂອງຂ້ານ້ອຍບໍ່ໄດ້ຖືກເຊື່ອງໄວ້ຈາກພຣະອົງ, ເມື່ອຂ້ານ້ອຍໄດ້ຖືກສ້າງຢູ່ໃນທ້ອງ ເມື່ອຂ້ານ້ອຍໄດ້ຖືກປະດິດຂຶ້ນມາພາຍໃນທີ່ເລິກແຫ່ງ
ໂລກ. [16]ພຣະອົງຊົງແນມເຫັນຂ້ານ້ອຍຕັ້ງແຕ່ຢູ່ໃນທ້ອງ; ມື້ທັງຫມົດທີ່ກຳນົດໃຫ້ຂ້ານ້ອຍນັ້ນຖືກບັນທຶກໄວ້ໃນຫນັງສືຂອງພຣະອົງ ກ່ອນທີ່
ວັນໃດໆໃນວັນເຫລົ່ານີ້ຍັງບໍ່ໄດ້ເກີດຂຶ້ນ.
[17]ຂ້າແດ່ພຣະເຈົ້າ, ພຣະດຳຣິຂອງພຣະອົງສຳລັບຂ້ານ້ອຍນັ້ນລ້ຳຄ່າຍິ່ງ, ຮວມກັນເຂົ້າກໍມາກມາຍຫລວງຫລາຍ! [18]ຖ້າຂ້ານ້ອຍຈະພະຍາຍາມ
ນັບສິ່ງນັ້ນ, ພວກມັນກໍຫລາຍກວ່າເມັດຊາຍ. ເມື່ອຂ້ານ້ອຍຕື່ນຂຶ້ນ, ຂ້ານ້ອຍກໍຍັງຄົງຢູ່ກັບພຣະອົງ.
[19]ຂ້າແດ່ພຣະເຈົ້າ, ຖ້າພຽງແຕ່ພຣະອົງຈະຊົງຂ້າຄົນອະທັມເຈົ້າຄົນໂຫດຮ້າຍທັງຫລາຍ, ຈົ່ງໄປໃຫ້ພົ້ນຈາກເຮົາ. [20]ພວກເຂົາກະບົດຕໍ່ພຣະອົງ
ແລະກະທຳໂດຍການຫລອກລວງ; ພວກສັດຕຣູຂອງພຣະອົງເວົ້າຕົວະ.
[21]ຂ້າແດ່ພຣະຢາເວ, ຂ້ານ້ອຍບໍ່ໄດ້ກຽດຊັງຜູ້ທີ່ກຽດຊັງພຣະອົງບໍ່? ຂ້ານ້ອຍບໍ່ໄດ້ອາຄາດແຄ້ນຜູ້ທີ່ລຸກຂຶ້ນຕໍ່ສູ້ພຣະອົງບໍ່? [22]ຂ້ານ້ອຍກຽດພວກ
ເຂົາຢ່າງສຸດຂີດ; ພວກເຂົາກາຍເປັນສັດຕຣູຂອງຂ້ານ້ອຍ.
[23]ຂ້າແດ່ພຣະເຈົ້າ, ຂໍຊົງກວດຄົ້ນຂ້ານ້ອຍແລະຊົງຮູ້ຈັກຈິດໃຈຂອງຂ້ານ້ອຍເຖີດ; ຂໍຊົງທົດສອບຂ້ານ້ອຍ ແລະຊົງຮູ້ຄວາມຄິດຂອງຂ້ານ້ອຍເຖີດ.
[24]ເບິ່ງວ່າມີທາງຊົ່ວໃດໆ ໃນຂ້ານ້ອຍ, ແລະທີ່ຈະນຳຂ້ານ້ອຍໄປໃນທາງນິຣັນດອນ.


generated on Tue Jun 17 19:01:42 2025

140 ສຳລັບຄະນະນັກດົນຕຣີ. ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະຢາເວ, ຂໍຊົງຊ່ວຍກູ້ຂ້ານ້ອຍຈາກຄົນຊົ່ວຮ້າຍ; ຂໍຊົງປົກປ້ອງຂ້າ
ນ້ອຍໄວ້ຈາກຄົນໂຫດຮ້າຍ.[2]ພວກເຂົາວາງແຜນຮ້າຍຢູ່ໃນໃຈ; ພວກເຂົາເຮັດໃຫ້ເກີດສົງຄາມທຸກມື້.[3]ລີ້ນຂອງພວກເຂົາເຮັດໃຫ້ບາດເຈັບ
ໄດ້ຄືງູພິດ; ພິດຂອງງູຢູ່ໃນຮີມສົບປາກຂອງພວກເຂົາ. ເສ ລາ

[4]ຂ້າແດ່ພຣະຢາເວ, ຂໍຊົງຄຸ້ມຄອງຂ້ານ້ອຍໃຫ້ພົ້ນຈາກມືຂອງຄົນອະທັມ; ຂໍຊົງປົກປ້ອງຂ້ານ້ອຍໄວ້ຈາກຄົນໂຫດຮ້າຍ ຜູ້ຄິດແຜນການຈະໃຫ້ຂ້າ
ນ້ອຍລົ້ມລົງ.[5]ຄົນໂອຫັງໄດ້ວາງກັບດັກສຳລັບຂ້ານ້ອຍ; ພວກເຂົາໄດ້ກາງຕາໜ່າງ; ພວກເຂົາໄດ້ຫ້າງແຮ້ວດັກຂ້ານ້ອຍ. ເສ ລາ
[6]ຂ້ານ້ອຍໄດ້ກ່າວຕໍ່ພຣະຢາເວວ່າ, "ພຣະອົງຊົງເປັນພຣະເຈົ້າ; ຂອງຂ້ານ້ອຍ ຂໍຊົງຮັບຟັງສຽງອ້ອນວອນຂໍຄວາມເມດຕາຂອງຂ້ານ້ອຍ."[7]ຂ້າແດ່
ພຣະຢາເວ, ອົງພຣະຜູ້ເປັນເຈົ້າ, ຜູ້ຊົງມີອຳນາດສາມາດຊ່ວຍຂ້າຂ້ານ້ອຍໃຫ້ພົ້ນໄດ້; ພຣະອົງໄດ້ຊົງເປັນໂລ້ກຳບັງຫົວຂ້ານ້ອຍໄວ້ໃນຍາມສົງ
ຄາມ.[8]ຂ້າແດ່ພຣະຢາເວ, ຂໍຢ່າຊົງໃຫ້ຄົນອະທັມສົມປຣາຖນາ; ຂໍຢ່າຊົງໃຫ້ແຜນຮ້າຍຂອງພວກເຂົາສຳເລັດ. ເສ ລາ
[9]ຜູ້ທີ່ອ້ອມຂ້ານ້ອຍນັ້ນໄດ້ຍົກຫົວຂອງພວກເຂົາຂຶ້ນ; ຂໍປ່ອຍໃຫ້ຄວາມຊົ່ວຮ້າຍຂອງຮີມສົບປາກຂອງພວກເຂົາເອງປົກຄຸມພວກເຂົາ.[10]ຂໍໃຫ້
ຖ່ານໄຟທີ່ລຸກໄຫມ້ຕົກລົງເທິງພວກເຂົາ, ຈົ່ງໂຍນພວກເຂົາລົງໃນໄຟ ລົງໃນບໍ່ເລິກຈົນຂຶ້ນມາບໍ່ໄດ້ອີກເລີຍ.[11]ຂໍຢ່າໃຫ້ລີ້ນຂອງຄົນທີ່ໃສ່ຮ້າຍຢູ່ຢ່າງ
ໝັ້ນຄົງໃນແຜ່ນດິນ; ຂໍໃຫ້ສິ່ງຊົ່ວຮ້າຍໄລ່ລ່າຄົນທຳລາຍເພື່ອເຮັດໃຫ້ພວກເຂົາໄດ້ຕາຍໄປ.
[12]ຂ້ານ້ອຍຮູ້ວ່າ ພຣະຢາເວຈະຊົງພິພາກສາດ້ວຍຄວາມເມດຕາແກ່ຜູ້ທຸກຍາກ, ແລະພຣະອົງຈະຊົງໃຫ້ຄວາມຍຸຕິທັມແກ່ຄົນຂັດສົນ.[13]ທີ່ຄົນຊອບ
ທັມຈະຂອບພຣະຄຸນພຣະນາມຊື່ຂອງພຣະອົງ; ຄົນສັດຊື່ຈະດຳຣົງຢູ່ຕໍ່ໜ້າຂອງພຣະອົງ.


generated on Tue Jun 17 19:01:42 2025

141 ບົດເພງສັນຣະເສີນຂອງດາວິດ.[1]ຂ້າແດ່ພຣະຢາເວ, ຂ້ານ້ອຍຮ້ອງຫາຕໍ່ພຣະອົງ; ຂໍຊົງຮີບເຂົ້າມາຫາຂ້ານ້ອຍດ້ວຍເຖີດ. ຂໍຊົງຟັງສຽງ
ຂອງຂ້ານ້ອຍ ເມື່ອຂ້ານ້ອຍຮ້ອງຫາຕໍ່ພຣະອົງ.[2]ຂໍໃຫ້ຄຳອະທິຖານຂອງຂ້ານ້ອຍເປັນເຫມືອນເຄື່ອງຫອມ; ເພາະຕໍ່ຫນ້າພຣະອົງ ຂໍໃຫ້ມື
ທີ່ຍົກຊູຂຶ້ນຂອງຂ້ານ້ອຍເປັນເຫມືອນເຄື່ອງຖວາຍບູຊາເວລາແລງ.

[3]ຂ້າແດ່ພຣະຢາເວ, ຂໍຊົງຕັ້ງຍາມເຝົ້າປາກຂອງຂ້ານ້ອຍ; ຂໍຊົງເຝົ້າຣະວັງປະຕູຮິມສົບປາກຂອງຂ້ານ້ອຍ.[4]ຢ່າໃຫ້ໃຈຂອງຂ້ານ້ອຍປຣາຖນາສິ່ງ
ຊົ່ວໃດໆ ຫລືຮ່ວມໃນກິຈະກຳແຫ່ງຄວາມບາບກັບຄົນຜູ້ຊຶ່ງກະທຳສິ່ງຊົ່ວຮ້າຍ. ແລະຂໍຢ່າໃຫ້ຂ້ານ້ອຍກິນຂອງດີໃດໆຂອງພວກເຂົາ.
[5]ຂໍໃຫ້ຄົນຊອບທັມຕີຂ້ານ້ອຍ; ແລະເມດຕາຕໍ່ຂ້ານ້ອຍ. ຂໍໃຫ້ເຂົາປັບປຸງຂ້ານ້ອຍ; ເຫມືອນນ້ຳມັນເທິງຫົວຂອງຂ້ານ້ອຍ; ຂໍຢ່າໃຫ້ຫົວຂອງຂ້າ
ນ້ອຍປະຕິເສດທີ່ຈະຍອມຮັບສິ່ງນັ້ນ. ແຕ່ຂໍໃຫ້ຄຳອະທິຖານຂອງຂ້ານ້ອຍຕໍ່ຕ້ານການກະທຳຊົ່ວຕ່າງໆ ຂອງພວກເຂົາສະເຫມີ.[6]ບັນດາຜູ້ນຳຂອງ
ພວກເຂົາຈະຖືກໂຍນລົງມາຈາກຍອດຫນ້າຜາສູງ; ພວກເຂົາຈະໄດ້ຍິນຖ້ອຍຄຳຂອງຂ້ານ້ອຍວ່າເປັນຖ້ອຍຄຳຫນ້າຊື່ນຊົມ.[7]ພວກເຂົາຈະຕ້ອງ
ເວົ້າວ່າ, "ເຫມືອນກັບເມື່ອຄົນໄຖແລະເຮັດໃຫ້ດິນແຕກ, ດັ່ງນັ້ນກະດູກຂອງພວກເຮົາກໍໄດ້ກະຈາຍທີ່ປາກແດນຄົນຕາຍສັນນັ້ນ."
[8]ດວງຕາຂອງຂ້ານ້ອຍຈ້ອງໄປຍັງພຣະອົງ, ຂ້າແດ່ພຣະຢາເວ, ພຣະຜູ້ເປັນເຈົ້າ, ຂ້ານ້ອຍລີ້ພັຍໃນພຣະອົງ ຂໍຢ່າຊົງໃຫ້ດວງວິນຍານຂອງຂ້າ
ນ້ອຍປາສະຈາກເຄື່ອງປ້ອງກັນ.[9]ຂໍຊົງປົກປ້ອງຂ້ານ້ອຍຈາກບ້ວງແຮ້ວທີ່ພວກເຂົາວາງດັກຂ້ານ້ອຍໄວ້, ແລະຈາກກັບດັກຂອງຜູ້ເຮັດຄວາມຊົ່ວ.
[10]ຂໍໃຫ້ຄົນຊົ່ວຮ້າຍຕົກລົງໄປໃນຕາຫນ່າງຂອງພວກເຂົາເອງ ຂະນະທີ່ຂ້ານ້ອຍຫນີໄປໄດ້.


generated on Tue Jun 17 19:01:42 2025

142 ຄຳແນະນຳຂອງດາວິດ, ເມື່ອເພິ່ນ ອະທິຖານຢູ່ໃນຖ້ຳ;.[1]ດ້ວຍສຽງຂອງຂ້ານ້ອຍ ຂ້ານ້ອຍຮ້ອງຫາຂໍຄວາມຊ່ວຍເຫລືອຈາກພຣະຢາເວ;
ດ້ວຍສຽງຂອງຂ້ານ້ອຍ ຂ້ານ້ອຍອ້ອນວອນຂໍຄວາມເມດຕາຈາກພຣະຢາເວ.[2]ຂ້ານ້ອຍລະບາຍຄວາມທຸກຂອງຂ້ານ້ອຍຕໍ່ຫນ້າພຣະອົງ;
ຂ້ານ້ອຍຮ້ອງຫາເລື່ອງຄວາມລຳບາກຂອງຂ້ານ້ອຍຕໍ່ພຣະອົງ.

[3]ເມື່ອວິນຍານພາຍໃນຂອງຂ້ານ້ອຍອ່ອນແຮງ, ພຣະອົງຊົງຮູ້ຈັກທາງຂອງຂ້ານ້ອຍ ໃນວິທີທີ່ຂ້ານ້ອຍເດີນໄປ ພວກເຂົາໄດ້ເຊື່ອງກັບດັກສຳລັບຂ້າ
ນ້ອຍໄວ້.[4]ຂ້ານ້ອຍເບິ່ງໄປທາງຂວາຂອງຂ້ານ້ອຍແລະເຫັນວ່າບໍ່ມີໃຜສົນໃຈຂ້ານ້ອຍ ບໍ່ມີທາງຫນີສຳລັບຂ້ານ້ອຍ; ບໍ່ມີໃຜສົນໃຈກ່ຽວກັບຊີວິດ
ຂອງຂ້ານ້ອຍ.[5]ຂ້ານ້ອຍຮ້ອງຫາພຣະອົງ, ຂ້າແດ່ພຣະຢາເວ; ຂ້ານ້ອຍໄດ້ກ່າວວ່າ, "ພຣະອົງຊົງເປັນທີ່ລີ້ພັຍຂອງຂ້ານ້ອຍ, ເປັນສ່ວນຫນຶ່ງຂອງ
ຂ້ານ້ອຍໃນແຜ່ນດິນຂອງຄົນເປັນ.
[6]ຂໍຊົງຟັງສຽງຮ້ອງທູນຂອງຂ້ານ້ອຍ, ເພາະຂ້ານ້ອຍຕົກຕ່ຳຫລາຍ; ຂໍຊົງຊ່ວຍກູ້ຂ້ານ້ອຍໃຫ້ພົ້ນຈາກພວກຜູ້ຂົ່ມເຫັງ, ເພາະພວກເຂົາແຂງແຮງ
ເກີນກຳລັງຂ້ານ້ອຍ.[7]ຂໍຊົງນຳດວງວິນຍານຂອງຂ້ານ້ອຍອອກຈາກຄຸກ ເພື່ອຂ້ານ້ອຍຈະຂອບພຣະຄຸນພຣະນາມຊື່ຂອງພຣະອົງ. ຄົນຊອບທັມຈະ
ອ້ອມຂ້ານ້ອຍໄວ້ ເພາະພຣະອົງຈະຊົງເຮັດແກ່ຂ້ານ້ອຍຢ່າງດີ."


generated on Tue Jun 17 19:01:42 2025

143 ບົດເພງສັນຣະເສີນຂອງດາວິດ.[1]ຂໍຊົງຟັງຄຳອະທິຖານຂອງຂ້ານ້ອຍ, ຂ້າແດ່ພຣະຢາເວ; ຂໍຟັງຄຳອ້ອນວອນຂອງຂ້ານ້ອຍ. ຕໍ່ຫນ້າພຣະ
ອົງຊົງສັດຊື່ແລະຊອບທັມ, ຂໍຊົງຕອບຂ້ານ້ອຍເຖີດ![2]ຂໍຢ່າຊົງຕັດສິນຜູ້ຮັບໃຊ້ຂອງພຣະອົງ, ເພາະໃນສາຍຕາຂອງພຣະອົງບໍ່ມີໃຜຊອບ
ທັມເລີຍ.

[3]ສັດຕຣູໄດ້ໄລ່ກວດດວງວິຍານຂອງຂ້ານ້ອຍ; ເຂົາໄດ້ຢຽບຢໍ່າຊີວິດຂ້ານ້ອຍລົງເຖິງດິນ; ເຂົາເຮັດໃຫ້ຂ້ານ້ອຍຢູ່ໃນທີ່ມືດ ເຫມືອນຄົນທີ່ໄດ້ຕາຍ
ດົນແລ້ວ.[4]ວິນຍານຂອງຂ້ານ້ອຍໄດ້ຖືກຄອບງຳຢູ່ພາຍໃນຂ້ານ້ອຍ; ໃຈຂ້ານ້ອຍກໍສິ້ນຫວັງ.
[5]ຂ້ານ້ອຍຣະນຶກເຖິງສມັຍເກົ່າ; ຂ້ານ້ອຍຊອກຫາສິ່ງກະທຳທັງຫມົດຂອງພຣະອົງ; ຂ້ານ້ອຍຕຶກຕອງເຖິງພາຣະກິດທັງຫລາຍຂອງພຣະອົງ.[6]ຂ້າ
ນ້ອຍຊູມືຂຶ້ນໄປຍັງພຣະອົງ; ດວງວິນຍານຂອງຂ້ານ້ອຍກະຫາຍຫາພຣະອົງຢ່າງແຜ່ນດິນທີ່ແຫ້ງ. ເສລາ
[7]ຂ້າແດ່ພຣະຢາເວ, ຂໍຊົງຕອບຂ້ານ້ອຍໂດຍໄວ້ເຖີດ, ເພາະວິນຍານຂອງຂ້ານ້ອຍສູນສິ້ນໄປແລ້ວ, ຂໍຢ່າຊົງລີ້ຫນ້າຂອງພຣະອົງຈາກຂ້ານ້ອຍ ບໍ່
ສະນັ້ນຂ້ານ້ອຍຈະເປັນເຫມືອນຄົນເຫລົ່ານັ້ນທີ່ລົງໄປຍັງຫລຸມເລິກ.[8]ຂໍຊົງໃຫ້ຂ້ານ້ອຍໄດ້ຍິນເຖິງຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງໃນເວ
ລາຮຸ່ງເຊົ້າ, ເພາະຂ້ານ້ອຍວາງໃຈໃນພຣະອົງ. ຂໍຊົງສອນຂ້ານ້ອຍເຖິງທາງທີ່ຄວນເດີນ, ເພາະຂ້ານ້ອຍຍົກດວງວິນຍານຂອງຂ້ານ້ອຍຕໍ່ພຣະອົງ.
[9]ຂໍຊົງຊ່ວຍກູ້ຂ້ານ້ອຍຈາກສັດຕຣູທັງຫລາຍຂອງຂ້ານ້ອຍ, ຂ້າແດ່ພຣະຢາເວ; ຂ້ານ້ອຍໄດ້ຫນີມາລີ້ຢູ່ໃນພຣະອົງ.[10]ຂໍຊົງສອນໃຫ້ຂ້ານ້ອຍເຮັດ
ຕາມພຣະທັຍຂອງພຣະອົງ, ເພາະພຣະອົງເປັນພຣະເຈົ້າ. ຂອງຂ້ານ້ອຍ ຂໍພຣະວິນຍານປະເສີດຂອງພຣະອົງ ຊົງນຳຂ້ານ້ອຍໄປໃນດິນແດນ
ແຫ່ງຄວາມຊອບທັມ.
[11]ຂ້າແດ່ພຣະຢາເວ, ເພາະເຫັນແກ່ພຣະນາມຊື່ຂອງພຣະອົງ; ຂໍຊົງຮັກສາຊີວິດຂ້ານ້ອຍໄວ້ ໂດຍຄວາມຊອບທັມຂອງພຣະອົງ, ຂໍຊົງນຳດວງວິນ
ຍານຂອງຂ້ານ້ອຍອອກມາຈາກຄວາມຍາກລຳບາກ.[12]ໃນຄວາມຊື່ສັດແຫ່ງຄຳສັນຍາຂອງພຣະອົງ ຂໍຊົງທຳລາຍສັດຕຣູຂອງຂ້ານ້ອຍ, ແລະຂໍຊົງ
ກຳຈັດສັດຕຣູທັງຫມົດຂອງຂ້ານ້ອຍເພາະຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ.


generated on Tue Jun 17 19:01:42 2025

144 ບົດເພງສັນຣະເສີນຂອງດາວິດ.[1]ສັນຣະເສີນແດ່ພຣະຢາເວ, ພຣະສີລາຂອງຂ້ານ້ອຍ, ຜູ້ຊົງຝຶກມືທັງຫລາຍຂອງຂ້ານ້ອຍໃຫ້ເຮັດສົງ
ຄາມ ແລະຝຶກນິ້ວມືຂອງຂ້ານ້ອຍໃຫ້ເຮັດເສິກ.[2]ພຣະອົງຊົງເປັນຄວາມຊື່ສັດແຫ່ງຄຳສັນຍາແລະຊົງເປັນປ້ອມປ້ອງກັນຂອງຂ້ານ້ອຍ, ຊົງ
ເປັນຫໍຄອຍສູງ ແລະຊົງເປັນຜູ້ຊື່ງຂ້ານ້ອຍເຂົ້າລີ້ພັຍ, ຜູ້ຊົງປາບຊົນຊາດທັງຫລາຍໃຫ້ຢູ່ໃຕ້ອຳນາດພຣະອົງ.

[3]ຂ້າແດ່ພຣະຢາເວ, ມະນຸດເປັນຜູ້ໃດນໍຊົງພຣະອົງຕ້ອງເອົາໃຈໃສ່ເບິ່ງແຍງເຂົາ ຫລືລູກຂອງລູກມະນຸດເປັນຜູ້ໃດທີ່ພຣະອົງຊົງຄິດເຖິງເຂົາ?[4]ມະ
ນຸດເປັນເຫມືອນລົມຫາຍໃຈ; ວັນເວລາທັງຫລາຍຂອງເຂົາເຫມືອນເງົາທີ່ຜ່ານໄປ.
[5]ຂ້າແດ່ພຣະຢາເວ, ຂໍຊົງໂນ້ມທ້ອງຟ້າລົງແລະສະເດັດລົງມາ; ຂໍຊົງແຕະຕ້ອງພູເຂົາທັງຫລາຍແລະເຮັດໃຫ້ມີຄວັນຂຶ້ນ.[6]ຂໍຊົງສົ່ງໃຫ້ສາຍຟ້າ
ແມບທັງຫລາຍອອກໄປແລະເຮັດໃຫ້ພວກສັດຕຣູຂອງຂ້ານ້ອຍກະແຈກກະຈາຍ; ຂໍຊົງຍິງລູກທະນູຂອງພຣະອົງ ແລະຂັບໄລ່ໃຫ້ພວກມັນສັບ
ສົນ.
[7]ຂໍຢຽດພຣະຫັດຂອງພຣະອົງຈາກທີ່ສູງ; ຂໍຊົງຊ່ວຍກູ້ຂ້ານ້ອຍໃຫ້ພົ້ນຈາກວັງນ້ຳເລິກ, ໃຫ້ພົ້ນຈາກພວກມືຄົນຕ່າງຊາດ.[8]ປາກຂອງພວກເຂົາເວົ້າ
ຕົວະ, ແລະມືຂວາຂອງພວກເຂົາບໍ່ຊື່ຕຣົງ.
[9]ຂ້ານ້ອຍຈະຮ້ອງເພງບົດໃຫມ່ຖວາຍແດ່ພຣະອົງ, ຂ້າແດ່ພຣະເຈົ້າ; ຂ້ານ້ອຍຈະດີດພິນສິບສາຍສັນຣະເສີນແດ່ພຣະອົງ,[10]ຜູ້ປຣະທານຄວາມ
ພົ້ນແກ່ກະສັດ, ແລະຜູ້ຊົງຊ່ວຍກູ້ດາວິດຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນຈາກດາບຊົ່ວຮ້າຍ.[11]ຂໍຊົງຊ່ວຍກູ້ຂ້ານ້ອຍແລະປ່ອຍຂ້ານ້ອຍໃຫ້ເປັນອິສະ
ລະຈາກມືພວກຄົນຕ່າງຊາດ. ປາກຂອງພວກເຂົາເວົ້າຕົວະ, ແລະມືຂວາຂອງພວກເຂົາບໍ່ຊື່ຕຣົງ.
[12]ຂໍໃຫ້ລູກຊາຍຂອງຂ້ານ້ອຍເປັນເຫມືອນຕົ້ນໄມ້ໃຫຍ່ເຕັມຂະຫນາດເມື່ອພວກເຂົາຍັງຫນຸ່ມໆຢູ່, ແລະຂໍໃຫ້ລູກຍິງຂອງຂ້ານ້ອຍເປັນເຫມືອນ
ເສົາຫົວມຸມທີ່ໄດ້ສະລັກຕາມແບບພະຣາຊວັງ.[13]ຂໍໃຫ້ຍຸ້ງສາງຂອງຂ້ານ້ອຍເຕັມໄປດ້ວຍຜົນຜະລິດທຸກຊະນິດ, ແລະຂໍໃຫ້ຝູງແກະຂອງຂ້ານ້ອຍ
ຜະລິດອອກມາເປັນພັນເປັນຫມື່ນທີ່ໃນທ້ອງທົ່ງຂອງຂ້ານ້ອຍເຖີ້ນ.
[14]ແລ້ວຂໍໃຫ້ຝູງງົວຂອງພວກຂ້ານ້ອຍມີລູກນ້ອຍຫລວງຫລາຍ. ບໍ່ມີໃຜພັງເຂົ້າມາໃນກຳແພງຂອງພວກຂ້ານ້ອຍໄດ້; ຂໍຢ່າໃຫ້ມີຊະເລີຍແລະ
ສຽງຮ້ອງທຸກໃນຫົນທາງຂອງພວກຂ້ານ້ອຍ.[15]ຄົນທີ່ຮັບພອນເຊັ່ນນັ້ນເປັນສຸກ ຄວາມສຸກຄືຄົນທີ່ພຣະເຈົ້າ; ຂອງເຂົາຄືພຣະຢາເວ.


generated on Tue Jun 17 19:01:42 2025

145 ບົດເພງສັນຣະເສີນຍ້ອງຍໍ. ຂອງດາວິດ.[1]ຂ້ານ້ອຍຈະຍົກຍ້ອງພຣະອົງ, ຂ້າແດ່ພຣະເຈົ້າ, ກະສັດຂອງຂ້ານ້ອຍ; ຂ້ານ້ອຍຈະສັນຣະເສີນ
ແດ່ພຣະນາມຊື່ຂອງພຣະອົງ ຕະຫລອດໄປເປັນນິດ.[2]ທຸກໆມື້ ຂ້ານ້ອຍຈະສັນຣະເສີນແດ່ພຣະອົງ; ຂ້ານ້ອຍຈະສັນຣະເສີນພຣະນາມຊື່
ຂອງພຣະອົງຕະຫລອດໄປເປັນນິດ.[3]ພຣະຢາເວນັ້ນຍິ່ງໃຫຍ່; ແລະສົມຄວນຈະໄດ້ຮັບການສັນຣະເສີນຢ່າງຍິ່ງ ຄວາມໃຫຍ່ຍິ່ງຂອງພຣະອົງນັ້ນ
ບໍ່ອາດຈະຮູ້ໄດ້.

[4]ຄົນຮຸ້ນຫນຶ່ງຈະຍົກຍ້ອງພຣະຣາຊກິດທັງຫລາຍຂອງພຣະອົງ ໃຫ້ຄົນອີກຮຸ້ນຫນຶ່ງຟັງ ແລະຈະປະກາດກິຈະການອັນຍິ່ງໃຫຍ່ຂອງພຣະອົງ.[5]ຂ້າ
ນ້ອຍຈະຕຶກຕອງເຖິງຄວາມຍິ່ງໃຫຍ່ໃນສະຫງ່າຣາສີອັນສູງສົ່ງຂອງພຣະອົງ, ແລະໃນພຣະຣາຊກິດຕ່າງໆ ອັນມະຫັສະຈັນຂອງພຣະອົງ.
[6]ພວກເຂົາຈະກ່າວເຖິງຣິດອຳນາດແຫ່ງພຣະຣາຊກິດອັນຍິ່ງໃຫຍ່ຂອງພຣະອົງ, ແລະຂ້ານ້ອຍຈະເລົ່າເຖິງຄວາມຍິ່ງໃຫຍ່ຂອງພຣະອົງ.[7]ເຂົາທັງ
ຫລາຍຈະປະກາດອອກມາເຖິງຄຸນຄວາມດີອັນອຸດົມຂອງພຣະອົງ, ແລະພວກເຂົາຈະຮ້ອງເພງເຖິງຄວາມຊອບທັມຂອງພຣະອົງ.
[8]ພຣະຢາເວຊົງເປັນພຣະຄຸນແລະຄວາມເມດຕາກາຣຸນາ, ຊົງຮ້າຍຊ້າແລະຊົງມີຄວາມຊື່ສັດແຫ່ງຄຳສັນຍາຢ່າງອຸດົມ.[9]ພຣະຢາເວຊົງດີຕໍ່ທຸກ
ຄົນ; ຄວາມເມດຕາຂອງພຣະອົງເປັນພຣະຣາຊກິດຂອງພຣະອົງທັງຫມົດ.
[10]ພຣະຣາຊກິດທັງສິ້ນຂອງພຣະອົງຈະຂອບພຣະຄຸນພຣະອົງ, ຂ້າແດ່ພຣະຢາເວ; ຜູ້ຈົງຮັກພັກດີທັງຫລາຍຂອງພຣະອົງ, ຈະສັນຣະເສີນແດ່ພ
ຣະອົງ.[11]ຜູ້ຈົງຮັກພັກດີທັງຫລາຍຂອງພຣະອົງຈະກ່າວເຖິງສະຫງ່າຣາສີແຫ່ງຣາຊອານາຈັກຂອງພຣະອົງ, ແລະພວກເຂົາຈະເລົ່າເຖິງຣິດອຳ
ນາດຂອງພຣະອົງ.[12]ພວກເຂົາຈະເຮັດໃຫ້ບັນດາມະນຸດຊາດຮູ້ເຖິງພຣະຣາຊກິດອັນຊົງອານຸພາບ ແລະຣັສມີຍອດຢ້ຽມແຫ່ງຣາຊອານາຈັກຂອງ
ພຣະອົງ.
[13]ພຣະຣາຊອານາຈັກຂອງພຣະອົງເປັນພຣະຣາຊອານາຈັກນິຣັນດອນ,ແລະການຄອບຄອງຂອງພຣະອົງດຳຣົງຢູ່ຕະຫລອດທຸກຊົ່ວເຊື້ອຊາດ.
[14]ພຣະຢາເວ ຊົງຊ່ວຍເຫລືອທຸກຄົນທີ່ກຳລັງຈະລົ້ມ ແລະຊົງອູ້ມຊູທຸກຄົນທີ່ລົ້ມລົງໃຫ້ລຸກຂຶ້ນ.[15]ດວງຕາທຸກດວງເຝົ້າຄອຍພຣະອົງ; ພຣະອົງປຣະ
ທານອາຫານໃຫ້ພວກເຂົາຕົງຕາມເວລາ.[16]ພຣະອົງຊົງຍື່ນມືຂອງພຣະອົງອອກແລະຊົງໃຫ້ສົມຄວນສິ່ງທີ່ມີຊີວິດອີ່ມຕາມຄວາມປຣາຖນາ.
[17]ພຣະຢາເວ ຊົງຊອບທັມໃນທຸກທາງທັງຫມົດຂອງພຣະອົງ ແລະຊົງພຣະຄຸນໃນທຸກສິ່ງທີ່ພຣະອົງຊົງກະທຳ.[18]ພຣະຢາເວ ສະຖິດໃກ້ທຸກຄົນທີ່
ຮ້ອງຫາພຣະອົງ, ຄືທຸກຄົນທີ່ຮ້ອງຫາພຣະອົງດ້ວຍໃຈຈິງ.[19]ພຣະອົງປຣະທານຕາມຄວາມປຣາຖນາຂອງບັນດາຜູ້ທີ່ຖວາຍກຽຕພຣະອົງ; ພຣະ
ອົງຊົງຟັງສຽງຮ້ອງຫາຂອງພວກເຂົາດ້ວຍ; ແລະຊົງຊ່ວຍພວກເຂົາໃຫ້ພົ້ນ.
[20]ພຣະຢາເວ ຊົງເຝົ້າເບິ່ງທຸກຄົນທີ່ຮັກພຣະອົງ, ແຕ່ພຣະອົງຈະຊົງທຳລາຍຄົນຊົ່ວທຸກຄົນ.[21]ປາກຂອງຂ້ານ້ອຍຈະກ່າວສັນຣະເສີນພຣະຢາເວ; ຂໍ
ມະນຸດຊາດທັງຫມົດຈົ່ງສັນຣະເສີນແດ່ພຣະນາມຊື່ບໍຣິສຸດຂອງພຣະອົງ, ຕະຫລອດໄປເປັນນິດເຖີດ.

 generated on Tue Jun 17 19:01:42 2025

# 146

[1]ຈົ່ງສັນຣະເສີນພຣະຢາເວ, ສັນຣະເສີນພຣະຢາເວເຖີດ, ດວງວິນຍານຂອງເຮົາເອີຍ.[2]ຂ້ານ້ອຍຈະສັນຣະເສີນພຣະຢາເວ; ຕາບເທົ່າທີ່
ຂ້ານ້ອຍມີຊີວິດຢູ່ ຂ້ານ້ອຍຈະຮ້ອງເພງສັນຣະເສີນພຣະເຈົ້າຂອງຂ້ານ້ອຍ ຂະນະທີ່ຂ້ານ້ອຍຍັງມີຊີວິດຢູ່.

[3]ຢ່າວາງໃຈໃນເຈົ້າເມືອງທັງຫລາຍຫລືໃນມະນຸດຊາດ, ເພາະໃນພວກເຂົານັ້ນບໍ່ມີຄວາມພົ້ນ.[4]ເມື່ອລົມຫາຍໃຈຂອງເຂົາຫມົດໄປ, ເຂົາກໍກັບເປັນ
ດິນ; ໃນວັນດຽວກັນນັ້ນແຜນງານຂອງເຂົາກໍສູນສິ້ນໄປ.
[5]ຜູ້ທີ່ເປັນສຸກຄືຄົນທີ່ມີພຣະເຈົ້າຂອງຢາໂຄບເປັນຜູ້ຊ່ວຍເຫລືອ, ຄືຜູ້ທີ່ຄວາມຫວັງຂອງເຂົາຢູ່ໃນພຣະຢາເວພຣະເຈົ້າຂອງເຂົາ.[6]ພຣະຢາເວ ໄດ້
ຊົງສ້າງທ້ອງຟ້າແລະແຜ່ນດິນໂລກ ທະເລ, ແລະທຸກສິ່ງທັງຫມົດຊຶ່ງຢູ່ໃນທີ່ເຫລົ່ານັ້ນ; ພຣະອົງຊົງຮັກສາພຣະສັນຍາໄວ້ເປັນນິດ.
[7]ພຣະອົງຊົງກະທຳຄວາມຍຸຕິທັມເພື່ອຄົນທີ່ຖືກບີບບັງຄັບ ແລະປຣະທານອາຫານແກ່ຄົນທີ່ຫິວ. ພຣະຢາເວຊົງປ່ອຍຜູ້ຖືກຄຸມຂັງໃຫ້ເປັນອິສຣະ;
[8]ພຣະຢາເວ ຊົງເປີດຕາຂອງຄົນຕາບອດ, ພຣະຢາເວ; ຊົງອຸ້ມຊູຜູ້ຖືກກົດຂີ່ໃຫ້ລຸກຂຶ້ນ; ພຣະຢາເວ ຊົງຮັກພວກຄົນຊອບທັມ.
[9]ພຣະຢາເວ ຊົງປົກປ້ອງຄົນຕ່າງດ້າວໃນດິນແດນ; ພຣະອົງຊົງຊ່ວຍຊູເດັກກຳພ້າພໍ່ແລະຍິງມ້າຍ, ແຕ່ພຣະອົງຊົງຂັດຂວາງທາງຂອງຄົນຊົ່ວ.[10]ພ
ຣະຢາເວ ຈະຊົງຄອບຄອງເປັນນິດ, ຊີໂອນເອີຍ, ພຣະເຈົ້າຂອງເຈົ້າຈະຊົງຄອບຄອງທຸກຊົ່ວເຊື້ອຊາດ. ຈົ່ງສັນຣະເສີນພຣະຢາເວເຖີດ.


generated on Tue Jun 17 19:01:42 2025

147 1ສັນຣະເສີນພຣະຢາເວ, ເພາະເປັນການດີທີ່ຈະຮ້ອງເພງສັນຣະເສີນພຣະເຈົ້າຂອງພວກເຮົາ, ເປັນການຫນ້າຊື່ນຊົມ, ແລະສົມຄວນທີ່
ຈະສັນຣະເສີນພຣະອົງ.

2ພຣະຢາເວ ຊົງສ້າງກຸງເຢຣູຊາເລັມຂຶ້ນມາໃຫມ່, ພຣະອົງຊົງຮວບຮວມຄົນອິສະຣາເອນທີ່ກະແຈກກະຈາຍໄປ. 3ພຣະອົງຊົງຮັກສາຄົນທີ່ໃຈແຕກ
ສະຫລາຍ ແລະຊົງພັນແຜນໃຫ້ພວກເຂົາ.
4ພຣະອົງຊົງນັບຈຳນວນດາວທັງຫລາຍ, ພຣະອົງຊົງຕັ້ງຊື່ມັນທຸກດວງ. 5ອົງພຣະຜູ້ເປັນເຈົ້າຂອງເຮົາຍິ່ງໃຫຍ່, ແລະຊົງຣິທານຸພາບຫລາຍ ຄວາມ
ເຂົ້າໃຈຂອງພຣະອົງ, ນັ້ນສຸດຈະຊັ່ງຊາໄດ້.
6ພຣະຢາເວ ຊົງຊ່ວຍຊູຜູ້ຖືກຂົ່ມເຫັງ, ພຣະອົງຊົງໂຍນຄົນຊົ່ວລົງເຖິງດິນ. 7ຈົ່ງຮ້ອງເພງສັນຣະເສີນແດ່ພຣະຢາເວ, ດ້ວຍການຂອບພຣະຄຸນ ຈົ່ງ
ຮ້ອງເພງສັນຣະເສີນພຣະເຈົ້າ, ຂອງພວກເຮົາດ້ວຍພິນ.
8ພຣະອົງຊົງປົກຄຸມທ້ອງຟ້າດ້ວຍເມກ ແລະຊົງຕຽມຝົນໃຫ້ແຜ່ນດິນໂລກ, ພຣະອົງຊົງເຮັດໃຫ້ຫຍ້າງອກເທິງພູເຂົາທັງຫລາຍ. 9ພຣະອົງປຣະ
ທານອາຫານແກ່ສັດ ແລະແກ່ພວກລູກນົກກາພວກມັນຮ້ອງເມື່ອມັນຫິວໂຫຍ.
10ພຣະອົງບໍ່ໄດ້ພໍໃຈໃນກຳລັງຂອງມ້າ, ພຣະອົງບໍ່ໄດ້ຊົງຍິນດີໃນຂາອັນແຂງແຮງຂອງມະນຸດ. 11ພຣະຢາເວ, ຊົງຍິນດີໃນຄົນທີ່ຖວາຍພຣະກຽດ
ແດ່ພຣະອົງ, ໃນຄົນທີ່ຫວັງໃນຄວາມຊື່ສັດແຫ່ງພຣະສັນຍາຂອງພຣະອົງ.
12ຈົ່ງສັນຣະເສີນພຣະຢາເວ, ກຸງເຢຣູຊາເລັມເອີຍ. ຈົ່ງຍ້ອງຍໍສັນຣະເສີນພຣະເຈົ້າຂອງເຈົ້າເຖີດ, ຊີໂອນເອີຍ. 13ເພາະພຣະອົງຊົງຮັກສາປະຕູ
ເມືອງຂອງເຈົ້າໃຫ້ເຂັ້ມແຂງ, ພຣະອົງຊົງອວຍພອນລູກທັງຫລາຍທີ່ຢູ່ທ່າມກາງເຈົ້າ. 14ພຣະອົງຊົງປຣະທານຄວາມຮັ່ງມີໃນເຂດແດນຂອງເຈົ້າ ຊົງ
ໃຫ້ເຈົ້າອີ່ມດ້ວຍເຂົ້າສາລີທີ່ດີທີ່ສຸດ.
15ພຣະອົງຊົງໃຊ້ພຣະບັນຍັດຂອງພຣະອົງໄປຍັງແຜ່ນດິນໂລກ, ພຣະຄຳສັ່ງຂອງພຣະອົງແລ່ນໄປຢ່າງວອງໄວ. 16ພຣະອົງປຣະທານຫິມະຢ່າງປຸຍ
ຂົນແກະ, ພຣະອົງຊົງໂຮຍນ້ຳຄ້າງເຫລື້ອມໆກະຈາຍທົ່ວຫນ້າດິນ.
17ພຣະອົງຊົງໂຍນລູກເຫັບຂອງພຣະອົງລົງມາແຂງເຫມືອນຂີ້ຫີນ, ບໍ່ມີໃຜຈະທົນທານຄວາມຫນາວຂອງພຣະອົງໄດ້? 18ພຣະອົງສົ່ງພຣະບັນຊາ
ຂອງພຣະອົງອອກໄປແລະລະລາຍພວກມັນເສຍ, ພຣະອົງຊົງໃຫ້ລົມຂອງພຣະອົງພັດແລະນ້ຳກໍໄຫລຖ້ວມ.
19ພຣະອົງໄດ້ຊົງສຳແດງຖ້ອຍຄຳຂອງພຣະອົງ, ແກ່ຢາໂຄບ ກົດບັນຍັດແລະກົດຫມາຍແຫ່ງຄວາມຊອບທັມຂອງພຣະອົງແກ່ອິສະຣາເອນ. 20ພ
ຣະອົງບໍ່ໄດ້ຊົງເຮັດເຊັ່ນນີ້ແກ່ປະຊາຊາດອື່ນໃດ, ແລະພວກເຂົາບໍ່ຮູ້ຈັກບັນດາກົດຫມາຍຂອງພຣະອົງ. ຈົ່ງສັນຣະເສີນພຣະຢາເວເຖີດ.


generated on Tue Jun 17 19:01:42 2025

148 [1]ຈົ່ງສັນຣະເສີນພຣະຢາເວເຖີດ. ຈົ່ງສັນຣະເສີນອົງພຣະຢາເວ; ໃນທ້ອງຟ້າຈົ່ງສັນຣະເສີນພຣະອົງ,ໃນທີ່ສູງຈົ່ງສັນຣະເສີນພຣະອົງ.[2]ບັນ
ດາທູດສະຫວັນທັງຫລາຍເອີຍ, ຈົ່ງສັນຣະເສີນພຣະອົງ; ບັນດາພົນໂຍທາທັງຫມົດຂອງພຣະອົງທີ່ເມືອງສະຫວັນ.

[3]ຈົ່ງສັນຣະເສີນພຣະອົງເຖີດ, ດວງຕາເວັນແລະດວງເດືອນ; ຈົ່ງສັນຣະເສີນພຣະອົງເຖີດ, ພ້ອມດວງດາວທັງຫມົດທີ່ສ່ອງແສງ.[4]ຈົ່ງສັນຣະເສີນພ
ຣະອົງເຖີດ, ທ້ອງຟ້າທີ່ສູງສຸດ ແລະວັງນ້ຳທັງຫລາຍຊຶ່ງຢູ່ເຫນືອທ້ອງຟ້າດ້ວຍ.
[5]ຈົ່ງໃຫ້ສິ່ງເຫລົ່ານັ້ນສັນຣະເສີນພຣະນາມຊື່ຂອງພຣະຢາເວ, ເພາະພຣະອົງໄດ້ຊົງສັ່ງ ສິ່ງເຫລົ່ານັ້ນກໍໄດ້ຖືກສ້າງຂຶ້ນມາ.[6]ພຣະອົງໄດ້ຊົງຕັ້ງສິ່ງ
ເຫລົ່ານັ້ນໄວ້ຕະຫລອດໄປເປັນນິດ; ພຣະອົງໄດ້ປຣະທານກົດບັນຍັດຊຶ່ງຈະບໍ່ປ່ຽນແປງ.
[7]ຈົ່ງສັນຣະເສີນພຣະຢາເວ, ຈາກແຜ່ນດິນໂລກເຖີດ ເຈົ້າສັດທະເລຂະຫນາດໃຫຍ່ທັງຫລາຍແລະທີ່ມະຫາສະມຸດເລິກທັງປວງ,[8]ໄຟກັບລູກເຫັບ,
ຫິມະກັບເຫລົ່າເມກ, ລົມພາຍຸເຮັດຕາມຄຳສັ່ງຂອງພຣະອົງ.
[9]ຈົ່ງສັນຣະເສີນພຣະອົງເຖີດ, ບັນດາພູເຂົາແລະເນີນເຂົາທັງຫມົດ, ຕົ້ນໄມ້ມີຜົນແລະໄມ້ສົນສີດາທັງຫມົດ.[10]ບັນດາສັດປ່າແລະບັນດາສັດໃຊ້
ງານທັງຫມົດ, ສັດທີ່ເລືອຄານແລະພວກນົກ.
[11]ຈົ່ງສັນຣະເສີນພຣະຢາເວເຖີດ, ບັນດາກະສັດຂອງແຜ່ນດິນໂລກ ແລະຊົນຊາດທັງຫມົດ, ເຈົ້າເມືອງທັງຫລາຍ ແລະຜູ້ຄອບຄອງທັງຫມົດຂອງ
ແຜ່ນດິນໂລກ.[12]ທັງພວກຊາຍຫນຸ່ມແລະຍິງສາວທັງຫລາຍ, ຜູ້ອາວຸໂສແລະເດັກໆ.
[13]ຈົ່ງໃຫ້ຄົນທັງຫມົດນີ້ສັນຣະເສີນພຣະນາມຊື່ຂອງພຣະຢາເວ, ເພາະພຣະນາມຂອງພຣະອົງ, ເທົ່ານັ້ນທີ່ຄວນໄດ້ຮັບການຍົກຍ້ອງ ແລະ
ສະຫງ່າຣາສີຂອງພຣະອົງ ຊົງແຜ່ອອກໄປທົ່ວແຜ່ນດິນໂລກແລະບັນດາທ້ອງຟ້າ.[14]ພຣະອົງໄດ້ຊົງຍົກເຂົາຂອງປະຊາຊົນຂຶ້ນ ເພື່ອໃຫ້ເປັນທີ່ສັນ
ຣະເສີນຂອງຜູ້ຈົງຮັກພັກດີຕໍ່ພຣະອົງ, ຄືຄົນອິສະຣາເອນຜູ້ຊຶ່ງຢູ່ໃກ້ພຣະອົງ, ຈົ່ງສັນຣະເສີນພຣະຢາເວເຖີດ.


generated on Tue Jun 17 19:01:42 2025

149 [1]ຈົ່ງສັນຣະເສີນພຣະຢາເວ, ຈົ່ງຮ້ອງເພງບົດໃຫມ່ຖວາຍພຣະຢາເວ, ຮ້ອງເພງສັນຣະເສີນພຣະອົງໃນທີ່ຊຸມນຸມຂອງຜູ້ຈົງຮັກພັກດີ.

[2]ຈົ່ງໃຫ້ອິສະຣາເອນຍິນດີໃນຜູ້ສ້າງຂອງພວກເຂົາ; ໃຫ້ປະຊາຊົນຂອງຊີໂອນປິຕິຍິນດີ ໃນກະສັດຂອງພວກເຂົາ.[3]ຈົ່ງໃຫ້ພວກເຂົາສັນຣະເສີນພ
ຣະນາມຊື່ຂອງພຣະອົງ ດ້ວຍການເຕັ້ນລໍາ; ຈົ່ງໃຫ້ພວກເຂົາຮ້ອງເພງສັນຣະເສີນພຣະອົງດ້ວຍຕີກອງແລະພິນ.
[4]ເພາະພຣະຢາເວຊົງຊື່ນບານໃນປະຊາຊົນຂອງພຣະອົງ; ພຣະອົງຍົກຍ້ອງຄົນທີ່ຖ່ອມໃຈດ້ວຍຄວາມພົ້ນ.[5]ຈົ່ງໃຫ້ຜູ້ຊອບທັມຍິນດີໃນຊັຍຊະນະ
ນີ້; ຈົ່ງໃຫ້ພວກເຂົາຮ້ອງເພງດ້ວຍຄວາມຍິນດີເທິງທີ່ນອນຂອງພວກເຂົາ.
[6]ຈົ່ງໃຫ້ການສັນຣະເສີນພຣະເຈົ້າ, ຢູ່ໃນປາກຂອງພວກເຂົາ ແລະໃຫ້ດາບສອງຄົມຢູ່ໃນມືຂອງພວກເຂົາ[7]ເພື່ອເຮັດການຕອບສະໜອງຕໍ່ບັນດາ
ປະຊາຊາດ ແລະເຮັດການລົງໂທດຊົນຊາດທັງຫລາຍ.
[8]ພວກເຂົາຈະເອົາພວກໂສ້ລ່າມບັນດາກະສັດຂອງພວກເຂົາ ແລະເອົາຕວນເຫລັກມັດບັນດາຜູ້ນໍາຂອງພວກເຂົາ.[9]ພວກເຂົາຈະເຮັດແກ່ເຂົາທັງ
ຫລາຍຕາມຄໍາພິພາກສາທີ່ບັນທຶກໄວ້ແລ້ວ. ນີ້ເປັນກຽດຕແກ່ຜູ້ຈົງຮັກພັກດີທັງຫມົດຂອງພຣະອົງ. ຈົ່ງສັນຣະເສີນພຣະຢາເວເຖີດ.


generated on Tue Jun 17 19:01:42 2025

150 1ຈົ່ງສັນຣະເສີນພຣະຢາເວເຖີດ, ຈົ່ງສັນຣະເສີນພຣະເຈົ້າ; ໃນສະຖານບໍຣິສຸດຂອງພຣະອົງ.2ຈົ່ງສັນຣະເສີນພຣະອົງໃນທ້ອງຟ້າທັງ
ຫລາຍ ອັນອານຸພາບຂອງພຣະອົງ; ຈົ່ງສັນຣະເສີນພຣະອົງ ເຖີດ ເພາະກິຈະການອັນຊົງອານຸພາບທັງຫລາຍຂອງພຣະອົງ ຈົ່ງສັນຣະ
ເສີນພຣະອົງເຖີດ ຕາມຄວາມຍິ່ງໃຫຍ່ທີ່ສຸດຂອງພຣະອົງ,

3ຈົ່ງສັນຣະເສີນພຣະອົງດ້ວຍສຽງແກ; ຈົ່ງສັນຣະເສີນພຣະອົງດ້ວຍພິນໃຫຍ່ແລະພິນເຂົາຄູ່.4ຈົ່ງສັນຣະເສີນພຣະອົງ ດ້ວຍຕີກອງແລະການ
ເຕັ້ນລຳ; ຈົ່ງສັນຣະເສີນພຣະອົງດ້ວຍເຄື່ອງສາຍທັງຫລາຍ ແລະເຄື່ອງເປົ່າທັງຫລາຍ.5ຈົ່ງສັນຣະເສີນພຣະອົງດ້ວຍສຽງຊຶ່ງທັງຫລາຍ; ຈົ່ງສັນ
ຣະເສີນພຣະອົງດ້ວຍສຽງສາບທັງຫລາຍ.
6ຈົ່ງໃຫ້ທຸກສິ່ງທີ່ຫາຍໃຈສັນຣະເສີນພຣະຢາເວ. ຈົ່ງສັນຣະເສີນພຣະຢາເວເຖີດ.

# ສຸພາສິດ

## 1

1ບັນດາສຸພາສິດຂອງໂຊໂລໂມນ ຜູ້ເປັນລູກຊາຍຂອງດາວິດ, ກະສັດແຫ່ງອິດສະຣາເອນ.2ສຸພາສິດເຫລົ່ານີ້ເພື່ອສອນໃຫ້ຮູ້ຈັກປັນຍາ
ແລະການສັ່ງສອນ, ເພື່ອສອນບັນດາຖ້ອຍຄຳແຫ່ງຄວາມເຂົ້າໃຈ,
3ເພື່ອໃຫ້ເຈົ້າໄດ້ຮັບການສັ່ງສອນເພື່ອທີ່ຈະດຳລົງຊີວິດໂດຍການກະທຳໃນສິ່ງທີ່ຊອບທຳ, ຍຸດຕິທຳ, ແລະທ່ຽງທຳ.

4ສຸພາສິດເຫລົ່ານີ້ໃຫ້ປັນຍາແກ່ຄົນຮູ້ຫນ້ອຍ, ແລະໃຫ້ຄວາມຮູ້ ແລະຄວາມຄິດທີ່ສະຫລາດແກ່ບັນດາຄົນຫນຸ່ມ.
5ຈົ່ງໃຫ້ຄົນທັງຫລາຍທີ່ມີປັນຍາໄດ້ຟັງ ແລະເພີ່ມເຕີມການຮຽນຮູ້ຂອງພວກເຂົາ, ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ການແນະນຳ,
6ເພື່ອໃຫ້ສຸພາສິດທັງຫລາຍ, ແລະຄຳອຸປະມາຕ່າງໆ, ແລະຖ້ອຍຄຳທັງຫລາຍຂອງເຫລົ່າຄົນມີປັນຍາ
ແລະຄວາມຫມາຍອັນລັບເລິກຂອງພວກເຂົາ.
7ຄວາມຢຳເກງພຣະຢາເວເປັນຈຸດເລີ່ມຕົ້ນຂອງຄວາມຮູ້ - ຄົນໂງ່ທັງຫລາຍມັກຫມິ່ນປະຫມາດປັນຍາ ແລະ ການສັ່ງສອນ.
8ລູກຊາຍຂອງເຮົາເອີຍ, ຈົ່ງຟັງຄຳສັ່ງສອນຂອງພໍ່ຂອງເຈົ້າ ແລະ ຢ່າຖິ້ມຄຳສອນຂອງແມ່ຂອງເຈົ້າ;
9ພວກເຂົາຈະເປັນພວງມະໄລທີ່ສະງ່າງາມສຳລັບຫົວຂອງເຈົ້າ ແລະເປັນສາຍຄໍອ້ອມຄໍຂອງເຈົ້າ.
10ລູກຊາຍຂອງເຮົາເອີຍ, ຖ້າຄົນບາບພະຍາຍາມຊັກຊວນເຈົ້າໃຫ້ເຮັດບາບຂອງເຂົາ, ຈົ່ງປະຕິເສດທີ່ຈະຕິດຕາມພວກເຂົາ.
11ຖ້າພວກເຂົາເວົ້າວ່າ, "ມາກັບເຮົາເທາະ, ໃຫ້ເຮົາກົ້ມຖ້າເພື່ອເຮັດການຄາດຕະກຳ, ໃຫ້ເຮົາລີ້
ແລະທຳຮ້າຍປະຊາຊົນຜູ້ບໍລິສຸດໂດຍບໍ່ມີເຫດຜົນ.
12ໃຫ້ເຮົາກືນພວກເຂົາທັງເປັນ, ຄືແບບແດນຄົນຕາຍ ກືນເຂົາເຫລົ່ານັ້ນທີ່ຍັງມີສຸຂະພາບດີ,
ແລະເຮັດໃຫ້ເຂົາຄືກັບຄົນເຫລົ່ານັ້ນທີ່ຕົກລົງໃນຂຸມນະລົກ.13ເຮົາຈະເຫັນຂອງມີຄ່າທຸກຢ່າງ;
ເຮົາຈະບັນຈຸບ້ານຂອງເຮົາໃຫ້ເຕັມດ້ວຍເຄື່ອງທີ່ເຮົາລັກມາຈາກຜູ້ອື່ນ.14ຈົ່ງມາຮ່ວມກັບພວກເຮົາ; ເຮົາທຸກຄົນຈະມີເງິນຖົງດຽວກັນ."
15ລູກຊາຍຂອງເຮົາເອີຍ, ຢ່າເດີນໃນທາງນັ້ນກັບພວກເຂົາ; ຈົ່ງຢ່າໃຫ້ຕີນຂອງເຈົ້າຕ້ອງວິທີຂອງພວກເຂົາ;
16ຕີນຂອງພວກເຂົາແລ່ນໄປຫາຄວາມຊົ່ວຮ້າຍ ແລະພວກເຂົາຟ້າວໄປເຮັດໃຫ້ເລືອດຕົກ.17ເພາະບໍ່ມີປະໂຫຍດທີ່ຈະກາງຕາຫນ່າງດັກນົກ
ໃນຂະນະທີ່ນົກກຳລັງບິນຢູ່.
18ຄົນເຫລົ່ານີ້ກົ້ມເພື່ອຂ້າໂຕເອງ - ພວກເຂົາວາງກັບດັກໂຕເອງ.19ດັ່ງນັ້ນທາງຂອງທຸກຄົນທີ່ສະແຫວງຫາຄວາມຮັ່ງມີດ້ວຍວິທີບໍ່ຍຸດຕິທຳ;
ໄດ້ມາໂດຍບໍ່ຊອບທຳ ຄືເອົາຊີວິດຂອງຄົນເຫລົ່ານັ້ນທີ່ຄອບຄອງມັນ.
20ປັນຍາໄດ້ຮ້ອງເອີ້ນດ້ວຍສຽງດັງທີ່ຫົນທາງ, ນາງໄດ້ຍົກສຽງຂອງນາງໃນສະຖານທີ່ໂລ່ງແຈ້ງ;21ນາງຮ້ອງສຽງດັງທີ່ຫົວຫົນທາງທີ່ມີສຽງດັງກ້ອງ
ນາງເວົ້າທີ່ທາງເຂົ້າປະຕູເມືອງວ່າ,22"ຄົນໂງ່ຈ້າເອີຍ, ພວກເຈົ້າຈະຮັກຄວາມໂງ່ຈ້າໄປອີກດົນປານໃດ? ດົນປານໃດ, ຄົນທີ່ມັກເຢາະເຍີ້ຍ,
ຈະພໍໃຈໃນການເຢາະເຍີ້ຍ, ພວກຄົນໂງ່ຈະຊັງຄວາມຮູ້ໄປອີກດົນປານໃດ?
23ຈົ່ງຫັນມາສົນໃຈຄຳຕັກເຕືອນຂອງເຮົາ; ເຮົາຈະເທຄວາມຄິດຂອງເຮົາໃຫ້ເຈົ້າທັງຫລາຍ; ເຮົາຈະໃຫ້ຖ້ອຍຄຳຂອງເຮົາຈະແຈ້ງແກ່ພວກເຈົ້າ.
24ເພາະເຮົາໄດ້ເອີ້ນແລ້ວ, ແຕ່ພວກເຈົ້າປະຕິເສດທີ່ຈະຟັງ; ເຮົາໄດ້ຍື່ນມືອອກ, ແຕ່ບໍ່ມີໃຜສົນໃຈເລີຍ.
25ແຕ່ພວກເຈົ້າບໍ່ໄດ້ສົນໃຈຄຳແນະນຳທຸກຢ່າງຂອງເຮົາ ແລະບໍ່ສົນໃຈຄຳຕັກເຕືອນຂອງເຮົາເລີຍ.
26ເຮົາຈະຫົວຂວັນໃນຄວາມເດືອດຮ້ອນຂອງພວກເຈົ້າ, ເຮົາຈະເຢາະເຍີ້ຍພວກເຈົ້າເມື່ອຄວາມຢ້ານມາຮອດພວກເຈົ້າ
-27ເມື່ອຄວາມຢ້ານຂອງພວກເຈົ້າມາຕຳພວກເຈົ້າ ຄືລົມພາຍຸຮ້າຍ ແລະ ຄວາມເດືອດຮ້ອນໄດ້ກວາດເອົາພວກເຈົ້າຄືພາຍຸຫມຸນ, ເມື່ອຄວາມທຸກ
ແລະຄວາມເຈັບປວດໃຈມາຮອດພວກເຈົ້າ.
28ແລ້ວພວກເຂົາຈະຮ້ອງເອີ້ນເຮົາ, ແລະ ເຮົາຈະບໍ່ຕອບ; ພວກເຂົາຈະສະແຫວງຫາເຮົາ, ແຕ່ຈະບໍ່ເຫັນເຮົາ.29ເພາະວ່າພວກເຂົາຊັງຄວາມຮູ້
ແລະ ບໍ່ເລືອກເອົາຄວາມຢຳເກງພຣະຢາເວ,30ພວກເຂົາບໍ່ຍອມຮັບຄຳແນະນຳຂອງເຮົາເລີຍ, ແລະ
ພວກເຂົາຫມິ່ນປະຫມາດຄຳຕັກເຕືອນທຸກຢ່າງຂອງເຮົາ.
31ພວກເຂົາຈະກິນຜົນແຫ່ງທາງຂອງພວກເຂົາ, ແລະ ພວກເຂົາຈະອີ່ມດ້ວຍຜົນຂອງຄວາມຄິດເຫັນຂອງພວກເຂົາເອງ.
32ເພາະການທີ່ຄົນໂງ່ໄດ້ຖືກຂ້າເມື່ອພວກເຂົາຫັນເຫໄປ, ແລະ ການທີ່ຄົນໂງ່ຫລົງເພີດເພີນກໍທຳຮ້າຍຕົນເອງ.33ແຕ່ໃຜກໍຕາມທີ່ຟັງເຮົາ
ຈະຢູ່ຢ່າງປອດໄພ ແລະ ຢູ່ຢ່າງສະຫງົບສຸກ ບໍ່ຢ້ານສິ່ງຮ້າຍໃດໆ."

 generated on Tue Jun 17 19:01:42 2025

2 [1]ລູກຊາຍຂອງເຮົາເອີຍ, ຖ້າເຈົ້າຮັບຖ້ອຍຄຳທັງຫລາຍຂອງເຮົາ ແລະ ສະສົມບັນຍັດທັງຫລາຍຂອງເຮົາໄວ້ກັບເຈົ້າ,
[2]ຈົ່ງງ່ຽງຫູຂອງເຈົ້າຟັງໃນປັນຍາ ແລະ ຈົ່ງອ່ຽງໃຈຂອງເຈົ້າເຂົ້າຫາຄວາມເຂົ້າໃຈ.

[3]ຖ້າເຈົ້າຮ້ອງຫາຄວາມເຂົ້າໃຈ ແລະເປັ່ງສຽງຂອງເຈົ້າຫາປັນຍາ,[4]ຖ້າເຈົ້າສະແຫວງຫາປັນຍາຄືເຈົ້າຫາເງິນ ແລະຊອກຫາຄວາມເຂົ້າໃຈ
ຄືເຈົ້າຊອກຫາຂຸມຊັບທີ່ຖືກເຊື່ອງໄວ້,[5]ແລ້ວເຈົ້າຈະເຂົ້າໃຈຄວາມຢຳເກງພຣະຢາເວ ແລ້ວເຈົ້າຈະພົບຄວາມຮູ້ຂອງພຣະເຈົ້າ.
[6]ເພາະພຣະຢາເວປະທານປັນຍາ, ຈາກປາກຂອງພຣະອົງ ຄວາມຮູ້ ແລະ ຄວາມເຂົ້າໃຈກໍອອກມາ.
[7]ພຣະອົງຊົງສະສົມສະຕິປັນຍາອັນດີເລີດໄວ້ໃຫ້ຄົນເຫລົ່ານັ້ນທີ່ຍິນດີໃນພຣະອົງ, ພຣະອົງຊົງເປັນໂລ້ແກ່ຄົນເຫລົ່ານັ້ນທີ່ດຳເນີນໃນຄວາມຊື່ສັດ,
[8]ພຣະອົງຊົງເຝົ້າບັນດາວິຖີແຫ່ງຄວາມຍຸດຕິທຳ ແລະ ພຣະອົງຈະຊົງປົກປ້ອງວິຖີທາງຂອງຄົນເຫລົ່ານັ້ນທີ່ເຊື່ອສັດທາໃນພຣະອົງ.
[9]ແລ້ວເຈົ້າຈະເຂົ້າໃຈຄວາມຊອບທຳ, ຄວາມຍຸດຕິທຳ, ແລະຄວາມທ່ຽງທຳ, ແລະທຸກວິຖີທາງທີ່ດີ.[10]ເພາະປັນຍາຈະເຂົ້າມາໃນໃຈຂອງເຈົ້າ,
ແລະ ຄວາມຮູ້ຈະເປັນທີ່ຫນ້າຍິນດີແກ່ຈິດວິນຍານຂອງເຈົ້າ.
[11]ຄວາມສະຫລາດຈະຄອຍຄຸ້ມກັນເຈົ້າ, ແລະຄວາມເຂົ້າໃຈຈະປົກປ້ອງເຈົ້າໄວ້.[12]ສິ່ງເຫລົ່ານັ້ນຈະຊ່ວຍເຈົ້າໃຫ້ພົ້ນຈາກທາງຂອງຄົນຊົ່ວ,
ຈາກຄົນເຫລົ່ານັ້ນທີ່ເວົ້າໃນສິ່ງທີ່ສ້າງຄວາມເດືອດຮ້ອນ,[13]ຜູ້ປະຖິ້ມບັນດາວິຖີແຫ່ງຄວາມຖືກຕ້ອງ ແລະຍ່າງໃນທາງແຫ່ງຄວາມມືດ.
[14]ພວກເຂົາຍິນດີເມື່ອພວກເຂົາເຮັດຊົ່ວ ແລະ ພໍອົກພໍໃຈໃນຄວາມຊົ່ວຮ້າຍນັ້ນ.[15]ພວກເຂົາຕິດຕາມວິຖີຂອງຄົນຕົມຕຸນ, ແລະ
ພວກເຂົາເຊື່ອງການຫລອກລວງໃນວິຖີທາງທັງຫລາຍຂອງພວກເຂົາ.
[16]ປັນຍາ ແລະ ຄວາມຮອບຄອບຈະຊ່ວຍໃຫ້ເຈົ້າພົ້ນຈາກຜູ້ຍິງແພດສະຫຍາ, ພົ້ນຈາກຜູ້ຍິງທີ່ຊອກຫາລວງໃຈ ແລະ
ຄຳເວົ້າຜິດຕ່າງໆຂອງນາງ.[17]ນາງປະຖິ້ມຄູ່ຊີວິດທີ່ນາງໄດ້ຕອນເປັນສາວ ແລະ ລືມພັນທະສັນຍາຂອງພຣະເຈົ້າຂອງນາງ.
[18]ເພາະບ້ານຂອງນາງດຶງລົງສູ່ຄວາມມໍຣະນາ ແລະ ຫົນທາງທັງຫລາຍຂອງນາງຈະນຳເຈົ້າໄປຫາຄົນເຫລົ່ານັ້ນໃນຂຸມຝັງສົບ.
[19]ທຸກຄົນທີ່ເຂົ້າຫານາງກໍຈະບໍ່ໄດ້ກັບມາອີກ ແລະ ພວກເຂົາຈະບໍ່ພົບວິຖີແຫ່ງຊີວິດ.
[20]ດັ່ງນັ້ນເຈົ້າຈະເດີນໃນທາງຂອງຄົນດີ ແລະ ຕິດຕາມວິຖີຂອງຄົນຊອບທຳ.
[21]ເພາະວ່າຄົນເຫລົ່ານັ້ນທີ່ເຮັດສິ່ງທີ່ທ່ຽງທຳຈະສ້າງບ້ານຢູ່ໃນແຜ່ນດິນ, ແລະ ຄົນເຫລົ່ານັ້ນທີ່ສັດຊື່ຈະດຳລົງຢູ່ໃນນັ້ນ.
[22]ແຕ່ຄົນອະທຳຈະຖືກກຳຈັດອອກຈາກແຜ່ນດິນ, ແລະ ຄົນບໍ່ສັດຊື່ຈະຖືກກຳຈັດອອກໄປ.


generated on Tue Jun 17 19:01:42 2025

3 [1]ລູກຊາຍຂອງເຮົາເອີຍ, ຢ່າລືມຄຳສອນຂອງເຮົາ ແລະ ໃຫ້ເຝົ້າຮັກສາຄຳສັ່ງສອນຂອງເຮົາໄວ້ໃນໃຈຂອງເຈົ້າ,
[2]ເພາະຄວາມຍືດຍາວຂອງວັນທັງຫລາຍ ແລະ ປີທັງຫລາຍຂອງຊີວິດ ແລະສັນຕິສຸກຈະເພີ່ມໃຫ້ແກ່ເຈົ້າ.

[3]ຢ່າໃຫ້ຄວາມຈິງຮັກພັກດີຕໍ່ພັນທະສັນຍາ ແລະຄວາມຊື່ສັດປະຖິ້ມເຈົ້າ, ຈົ່ງພັນມັນໄວ້ຮອບຄໍຂອງເຈົ້າ,
ຈົ່ງຂຽນມັນໄວ້ເທິງແຜ່ນຈາລຶກແຫ່ງຫົວໃຈຂອງເຈົ້າ.[4]ແລ້ວເຈົ້າຈະຫາຄວາມຊື່ນຊົມ ແລະຊື່ສຽງດີໃນສາຍຕາພຣະເຈົ້າ
ແລະໃນສາຍຕາມະນຸດ.
[5]ຈົ່ງວາງໃຈໃນພຣະຢາເວດ້ວຍສຸດໃຈຂອງເຈົ້າ ແລະຢ່າເພິ່ງພາຄວາມເຂົ້າໃຈຂອງຕົວເຈົ້າເອງ;[6]ຈົ່ງເຊື່ອຟັງພຣະອົງໃນທຸກວິຖີທາງຂອງເຈົ້າ
ຈົ່ງເຊື່ອຟັງພຣະອົງເອງຈະຊົງເຮັດໃຫ້ວິຖີຂອງເຈົ້າຊື່ຕົງ.
[7]ຢ່າເປັນຄົນສະຫລາດໃນສາຍຕາຂອງເຈົ້າເອງ; ຈົ່ງຢຳເກງພຣະຢາເວ ແລະຈົ່ງຫັນຈາກຄວາມຊົ່ວຮ້າຍ.
[8]ນີ້ຈະເປັນການປຽວຢາໃຫ້ແກ່ເຫນື້ອຫນັງຂອງເຈົ້າ ແລະຄວາມສົດຊື່ນແກ່ຮ່າງກາຍຂອງເຈົ້າ.
[9]ຈົ່ງຖວາຍພຣະກຽດແດ່ພຣະຢາເວດ້ວຍສັບສິນຂອງເຈົ້າ ແລະດ້ວຍຜົນທຳອິດແຫ່ງຜົນຜະລິດທຸກຢ່າງຂອງເຈົ້າ,
[10]ແລະບ່ອນເກັບເຄື່ອງຂອງເຈົ້າຈະເຕັມລົ້ນ ແລະອ່າງເກັບຂອງເຈົ້າຈະລົ້ນເຫລືອ ດ້ວຍເຫລົ້າອະງຸ່ນຫມັກໃຫມ່.
[11]ລູກຊາຍຂອງເຮົາເອີຍ, ຢ່າດູຫມິ່ນຄຳສັ່ງສອນຂອງພຣະຢາເວ ແລະຢ່າຊັງຄຳເຕືອນຂອງພຣະອົງ,
[12]ເພາະພຣະຢາເວຊົງຕີສອນຜູ້ທີ່ພຣະອົງຊົງຮັກ, ດັ່ງພໍ່ຕັກເຕືອນລູກຊາຍທີ່ເຂົາຮັກ.
[13]ມະນຸດຜູ້ພົບປັນຍາກໍເປັນສຸກ; ເຂົາໄດ້ຄວາມເຂົ້າໃຈດ້ວຍເຊັ່ນກັນ.
[14]ສິ່ງທີ່ເຈົ້າໄດ້ຮັບຈາກສະຕິປັນຍາຍ່ອມດີກວ່າສິ່ງທີ່ໄດ້ຮັບຜົນຕອບແທນເປັນເງິນ ແລະ ກຳໄລຂອງມັນຍ່ອມດີກວ່າທອງຄຳ.
[15]ປັນຍາລ້ຳຄ່າກວ່າເພັດພອຍ ແລະ ບໍ່ມີສິ່ງໃດທີ່ເຈົ້າປາຖະຫນາຈະສາມາດປຽບກັບປັນຍາໄດ້ເລີຍ.
[16]ປັນຍາມີຊີວິດຍືນຍາວຢູ່ໃນມືຂວາຂອງນາງ; ສ່ວນມືຊ້າຍມີຄວາມມັ່ງມີ ແລະກຽດຕິຍົດ.
[17]ທາງຂອງປັນຍາເປັນທາງຂອງຄວາມກະລຸນາ ແລະ ວິຖີທັງຫມົດຂອງປັນຍາຄືຄວາມສຸກ.
[18]ປັນຍາເປັນຕົ້ນໄມ້ແຫ່ງຊີວິດແກ່ຄົນເຫລົ່ານັ້ນທີ່ເອົານາງໄວ້, ບັນດາຜູ້ທີ່ຍຶດນາງໄວ້ແຫນ້ນຈະມີຄວາມສຸກ.
[19]ພຣະຢາເວຊົງວາງຮາກແຜ່ນດິນໂລກ, ໂດຍພຣະປັນຍາ ພຣະອົງຊົງສະຖາປະນາຟ້າໂດຍຄວາມເຂົ້າໃຈ.[20]ໂດຍຄວາມຮູ້ຂອງພຣະອົງ
ນ້ຳບາດານກໍພຸ້ງອອກມາ ແລະເມກກໍໂປຍນ້ຳຄ້າງລົງມາ.
[21]ລູກຊາຍຂອງເຮົາເອີຍ, ຈົ່ງເຝົ້າຮັກສາຄວາມຮອບຮູ້, ແລະຄວາມສະຫລາດໄວ້ ແລະຈົ່ງຢ່າໃຫ້ສິ່ງເຫລົ່ານີ້ຄາດສາຍຕາຂອງເຈົ້າ.
[22]ສິ່ງເຫລົ່ານີ້ຈະເປັນຊີວິດແກ່ຈິດໃຈຂອງເຈົ້າ ແລະເປັນເຄື່ອງປະດັບຂອງການເຊີດຊູທີ່ສວມຮອບຄໍຂອງເຈົ້າ.
[23]ແລ້ວເຈົ້າຈະດຳເນີນໃນທາງຂອງເຈົ້າຢ່າງປອດໄພ ແລະ ຕີນຂອງເຈົ້າຈະບໍ່ສະດຸດ;[24]ເມື່ອເຈົ້ານອນລົງ, ເຈົ້າຈະບໍ່ຢ້ານເມື່ອເຈົ້ານອນ,
ເຈົ້າກໍຈະຫລັບສະບາຍ.
[25]ຢ່າຢ້ານຄວາມຫວາດກົວທີ່ມາຮອດຢ່າງກະທັນຫັນ ຫລື ຢ້ານຄວາມຫາຍຍະນະທີ່ຄົນອະທຳເປັນຕົ້ນເຫດ, ເມື່ອມັນມາ,
[26]ເພາະພຣະຢາເວຈະຊົງຢູ່ຂ້າງເຈົ້າ ແລະ ຈະຊົງປົກປ້ອງຕີນຂອງເຈົ້າຈາກການຖືກຈັບໃນກັບດັກ.
[27]ຢ່າກີດກັນສິ່ງດີໄວ້ຈາກຜູ້ສົມຄວນຈະໄດ້ຮັບ, ໃນເມື່ອສິ່ງນີ້ຢູ່ໃນອຳນາດຂອງເຈົ້າທີ່ຈະເຮັດໄດ້.[28]ຢ່າເວົ້າກັບເພື່ອນບ້ານຂອງເຈົ້າວ່າ, "ໄປເທາະ
ແລ້ວຈຶ່ງມາໃຫມ່, ແລະມື້ອື່ນຂ້ອຍຈະໃຫ້," ໃນເມື່ອເຈົ້າມີເງິນຢູ່ກັບເຈົ້າແລ້ວ.
[29]ຢ່າວາງແຜນທຳຮ້າຍເພື່ອນບ້ານຂອງເຈົ້າ ຜູ້ຢູ່ໃກ້ຊິດ ແລະໄວ້ວາງໃຈໃນເຈົ້າ.[30]ຢ່າໂຕ້ຖຽງກັບໃຜຢ່າງບໍ່ມີເຫດຜົນ,
ໃນເມື່ອເຂົາບໍ່ໄດ້ເຮັດຫຍັງທີ່ທຳຮ້າຍເຈົ້າ.
[31]ຢ່າອິດສາບຸກຄົນທີ່ໂຫດຮ້າຍ ຫລືເລືອກທາງໃດໆຂອງພວກເຂົາເລີຍ.[32]ເພາະບຸກຄົນທີ່ສໍ້ໂກງ ເປັນທີ່ຊົງກຽດຊັງຂອງພຣະຢາເວ,
ແຕ່ພຣະອົງຊົງນຳຄົນທ່ຽງທຳ ເຂົ້າໄວ້ໃນຄວາມຫມັ້ນໃຈໃນພຣະອົງ.
[33]ຄຳສາບແຊ່ງຂອງພຣະຢາເວ ຢູ່ເທິງບ້ານຂອງບຸກຄົນອະທຳ, ແຕ່ພຣະອົງຊົງອວຍພອນບ້ານຂອງຄົນທັງຫລາຍທີ່ຊອບທຳ.
[34]ພຣະອົງຊົງເຢາະເຢີ້ຍຄົນທີ່ມັກເຢາະເຢີ້ຍ, ແຕ່ພຣະອົງຊົງປະທານຄວາມຊື່ນຊົມຍິນດີ ຂອງພຣະອົງແກ່ຄົນທັງຫລາຍທີ່ຖ່ອມຕົວ.
[35]ຄົນທັງຫລາຍທີ່ມີປັນຍາຈະໄດ້ກຽດເປັນສົມບັດ, ແຕ່ເຫລົ່າຄົນໂງ່ຈະໄດ້ຄວາມອັບປະຍົດຂອງພວກເຂົາ.

 generated on Tue Jun 17 19:01:42 2025

# 4

[1]ລູກຊາຍ, ທັງຫລາຍເອີຍ, ຈົ່ງຟັງຄຳສັ່ງສອນຂອງພໍ່, ແລະ ຈົ່ງໃສ່ໃຈເພື່ອເຈົ້າຈະໄດ້ຮູ້ເຖິງຄວາມຮອບຮູ້.
[2]ເຮົາກຳລັງໃຫ້ຄຳແນະນຳທີ່ດີແກ່ພວກເຈົ້າ; ຢ່າປະຖິ້ມຄຳສອນຂອງເຮົາ.

[3]ເມື່ອເຮົາເປັນເດັກນ້ອຍຢູ່ກັບພໍ່ຂອງເຮົາ, ອ່ອນໄວ ແລະ ເປັນລູກຮັກຂອງແມ່ຂອງເຮົາ,[4]ພໍ່ໄດ້ສອນເຮົາ ແລະ ໄດ້ເວົ້າກັບເຮົາວ່າ,
"ຈົ່ງໃຫ້ໃຈຂອງເຈົ້າຍຶດຖ້ອຍຄຳຂອງເຮົາໄວ້ໃຫ້ດີ; ຈົ່ງຮັກສາບັນຍັດທັງຫລາຍຂອງເຮົາ ແລະ ມີຊີວິດຢູ່.
[5]ຈົ່ງສະແຫວງຫາປັນຍາ ແລະ ຄວາມຮອບຮູ້; ຢ່າລືມ ແລະ ຢ່າປະຖິ້ມຖ້ອຍຄຳແຫ່ງປາກຂອງເຮົາ;[6]ຢ່າປະຖິ້ມປັນຍາ
ແລ້ວນາງຈະຮັກສາເຈົ້າໄວ້; ຈົ່ງຮັກນາງ ແລ້ວນາງຈະຄຸ້ມຄອງເຈົ້າ.
[7]ປັນຍາເປັນສິ່ງສຳຄັນທີ່ສຸດ, ດັ່ງນັ້ນຈົ່ງສະແຫວງຫາປັນຍາ ແລະ ຈົ່ງທຸ້ມເທທັງຫມົດທີ່ເຈົ້າມີ ເພື່ອເຈົ້າຈະໄດ້ຄວາມຮອບຮູ້ໄວ້.
[8]ຈົ່ງຖະຫນອມປັນຍາໄວ້; ແລ້ວນາງຈະຍົກຍ້ອງເຈົ້າ ເມື່ອເຈົ້າກອດນາງໄວ້.[9]ນາງຈະເອົາພວງມະໄລແຫ່ງກຽດຕິຍົດສວມຫົວຂອງເຈົ້າ;
ນາງຈະໃຫ້ມົງກຸດທີ່ສວຍງາມແກ່ເຈົ້າ."
[10]ລູກຊາຍຂອງເຮົາເອີຍ, ຈົ່ງຟັງ, ແລະເອົາໃຈໃສ່ໃນຖ້ອຍຄຳທັງຫລາຍຂອງເຮົາ, ແລ້ວເຈົ້າຈະໄດ້ຮັບຊີວິດຍືນຍາວໃນຊີວິດຂອງເຈົ້າ.
[11]ເຮົາໄດ້ສອນເຈົ້າເລື່ອງທາງແຫ່ງປັນຍາແລ້ວ; ເຮົາໄດ້ນຳເຈົ້າໃນຫົນທາງແຫ່ງຄວາມທ່ຽງທຳ.[12]ເມື່ອເຈົ້າກ້າວຍ່າງຕີນເດີນ,
ຈະບໍ່ມີໃຜຂັດຂວາງທາງຂອງເຈົ້າ ແລະ ຖ້າເຈົ້າວິ່ງວອນ, ເຈົ້າຈະບໍ່ສະດຸດ.
[13]ຈົ່ງຍຶດຄຳສອນໄວ້ໃຫ້ແຫນ້ນ, ແລະ ຢ່າປ່ອຍໄປ; ຈົ່ງເຝົ້ານາງໄວ້. ເພາະນາງເປັນຊີວິດຂອງເຈົ້າ.[14]ຢ່າເຂົ້າໄປໃນວິຖີຂອງຄົນອະທຳ ແລະ
ຢ່າຍ່າງໄປໃນທາງຂອງຄົນເຫລົ່ານັ້ນທີ່ເຮັດຊົ່ວ.[15]ຈົ່ງຫລີກຫນີ, ຢ່າຍ່າງເທິງນັ້ນ; ຈົ່ງຫັນກັບອອກໄປສາ ແລະ ຈົ່ງໄປອີກທາງຫນຶ່ງ.
[16]ເພາະພວກເຂົານອນບໍ່ຫລັບ ຈົນກວ່າພວກເຂົາຈະເຮັດຊົ່ວ ແລະ ພວກເຂົາຈະຂົ່ມຕາຫລັບບໍ່ລົງ ຖ້າບໍ່ໄດ້ເຮັດໃຫ້ຄົນສະດຸດ.
[17]ເພາະພວກເຂົາກິນອາຫານແຫ່ງຄວາມຊົ່ວຮ້າຍ ແລະ ດື່ມເຫລົ້າອະງຸ່ນແຫ່ງຄວາມທາລຸນ.
[18]ແຕ່ວິຖີຂອງຄົນຊອບທຳຄືແສງອະລຸນທຳອິດທີ່ເລີ່ມສະຫວ່າງຂຶ້ນ; ຊຶ່ງຄ່ອຍໆສ່ອງແສງຈົນຮອດສະຫວ່າງເຕັມທີ່ຂອງກາງເວັນ.
[19]ທາງຂອງຄົນອະທຳກໍ່ຄືຄວາມມືດ - ພວກເຂົາບໍ່ຮູ້ວ່າຈະສະດຸດອັນໃດ.
[20]ລູກຊາຍຂອງເຮົາເອີຍ, ຈົ່ງໃສ່ໃຈຖ້ອຍຄຳທັງຫລາຍຂອງເຮົາ; ຈົ່ງອ່ຽງຫູຂອງເຈົ້າເຂົ້າຫາຄຳເວົ້າຂອງເຮົາ.[21]ຢ່າໃຫ້ມັນພາດສາຍຕາຂອງເຈົ້າ;
ຈົ່ງຮັກສາມັນໄວ້ພາຍໃນໃຈຂອງເຈົ້າ.
[22]ເພາະຖ້ອຍຄຳທັງຫລາຍຂອງເຮົາເປັນຊີວິດແກ່ຜູ້ຄົ້ນພົບ ແລະ ເປັນພາລະນາໄມແກ່ຮ່າງກາຍທຸກສ່ວນຂອງພວກເຂົາ.[23]ຈົ່ງລະວັງໃຈຂອງເຈົ້າ
ແລະ ປົກປ້ອງດູແລດ້ວຍຄວາມຫມັ່ນພຽນ, ເພາະຈາກຫົວໃຈນັ້ນເອງໄດ້ເກີດນ້ຳພຸແຫ່ງຊີວິດ.
[24]ຈົ່ງຖິ້ມຄຳເວົ້າທີ່ເຊື່ອຖືບໍ່ໄດ້ຈາກເຈົ້າ ແລະໃຫ້ຄຳເວົ້າປະຈົບປະແຈງຫ່າງຈາກເຈົ້າ.[25]ໃຫ້ດວງຕາຂອງເຈົ້າເບິ່ງຊື່ໄປທາງຫນ້າ
ແລະໃຫ້ການຈ້ອງເບິ່ງຂອງເຈົ້າຊື່ຕົງໄປທາງຫນ້າເຈົ້າ.
[26]ຈົ່ງເຮັດຫົນທາງແຫ່ງຕີນຂອງເຈົ້າໃຫ້ພຽງ; ແລ້ວທາງທັງຫມົດຂອງເຈົ້າຈະປອດໄພ.[27]ຢ່າຫັນເຫໄປທາງຂວາ ຫລື ທາງຊ້າຍ,
ຈົ່ງຫັນຕີນຂອງເຈົ້າອອກຈາກຄວາມຊົ່ວຮ້າຍ.

5 [1]ລູກຊາຍຂອງເຮົາເອີຍ, ຈົ່ງຕັ້ງໃຈຟັງປັນຍາຂອງເຮົາ; ຈົ່ງອ່ຽງຫູຂອງເຈົ້າຟັງຄວາມເຂົ້າໃຈຂອງເຮົາ,
[2]ເພື່ອເຈົ້າຈະໄດ້ຮຽນຮູ້ເຖິງຄວາມຮອບຄອບ ແລະ ຮີມສົບຂອງເຈົ້າຈະປົກປ້ອງຄວາມຮູ້.

[3]ເພາະຮີມສົບຂອງຍິງແພດສະຫຍາກໍຢົດນ້ຳເຜີ້ງອອກມາ ແລະປາກຂອງນາງກໍລຽບນຽນຍິ່ງກວ່ານ້ຳມັນ,[4]ແຕ່ໃນທີ່ສຸດນາງກໍຂົມຢ່າງວໍລະເພັດ
ຕັດຄືຢ່າງດາບທີ່ຄົມ.
[5]ຕີນທັງສອງຂອງນາງກ້າວໄປສູ່ຄວາມຕາຍ; ທຸກບາດຕີນຂອງນາງຍ່າງຊື່ໄປຍັງແດນມໍລະນາ.[6]ນາງບໍ່ໄດ້ໃຫ້ຄວາມຄິດກ່ຽວກັບວິຖີແຫ່ງຊີວິດ.
ບາດຕີນຂອງນາງກໍເລ້ລ້ອນໄປ; ນາງບໍ່ຮູ້ວ່ານາງກຳລັງໄປທີ່ແຫ່ງໃດ.
[7]ລູກຊາຍທັງຫລາຍຂອງເຮົາເອີຍ, ບັດນີ້, ຈົ່ງຟັງເຮົາ; ແລະຢ່າຫັນໄປຈາກການຟັງຖ້ອຍຄຳທັງຫລາຍແຫ່ງປາກຂອງເຮົາ.
[8]ຈົ່ງຮັກສາທາງຂອງເຈົ້າໃຫ້ໄກຈາກນາງ ແລະຢ່າໄປໃກ້ປະຕູບ້ານຂອງນາງ.
[9]ໂດຍວິທີນັ້ນ ເຈົ້າຈະບໍ່ມອບກຽດຂອງເຈົ້າໃຫ້ແກ່ຄົນອື່ນໆ ຫລື ໃຫ້ປີທັງຫລາຍແຫ່ງຊີວິດຂອງເຈົ້າແກ່ຄົນໂຫດຮ້າຍ;
[10]ຄົນແປກຫນ້າທັງຫລາຍຈະບໍ່ອີ່ມເອມໃຈດ້ວຍຊັບສິນຂອງເຈົ້າ; ແລະ ເຄື່ອງທີ່ໄດ້ມາດ້ວຍນ້ຳພັກນ້ຳແຮງຂອງເຈົ້າ
ຈະບໍ່ຕົກໄປໃນບ້ານຂອງຄົນແປກຫນ້າ.
[11]ໃນບັ້ນປາຍຊີວິດຂອງເຈົ້າ ເຈົ້າຈະຄວນຄາງ ເມື່ອເນື້ອຫນັງ ແລະ ຮ່າງກາຍຂອງເຈົ້າເສື່ອມຫມົດສະພາບໄປ.[12]ເຈົ້າຈະເວົ້າວ່າ,
"ຂ້ອຍຊັງການສັ່ງສອນ ແລະ ຈິດໃຈຂອງຂ້ອຍ ໄດ້ດູຫມິ່ນການຕັກເຕືອນ!
[13]ຂ້ອຍຈະບໍ່ເຊື່ອຟັງບັນດາຄູຂອງຂ້ອຍ ຫລືອ່ຽງຫູໃຫ້ແກ່ບັນດາຜູ້ສັ່ງສອນຂອງຂ້ອຍ.[14]ຂ້ອຍຖືກຂາຍຫນ້າ ໃນທ່າມກາງການປະຊຸມ,
ໃນການຊຸມນຸມໃນຫມູ່ປະຊາຊົນ."
[15]ຈົ່ງດື່ມນ້ຳຈາກຖັງເກັບນ້ຳຂອງເຈົ້າ ແລະດື່ມນ້ຳທີ່ໄຫລຈາກບໍ່ຂອງເຈົ້າເອງ.[16]ສົມຄວນບໍ່ທີ່ຈະໃຫ້ນ້ຳພຸຂອງເຈົ້າໄຫລລົ້ນອອກໄປທຸກທີ່
ແລະໃຫ້ນ້ຳຂອງເຈົ້າໄຫລໄປທີ່ລານເມືອງ?[17]ຈົ່ງໃຫ້ມັນເປັນຂອງເຈົ້າແຕ່ຜູ້ດຽວ ແລະບໍ່ແມ່ນແກ່ຄົນແປກຫນ້າແກ່ເຈົ້າ.
[18]ຂໍໃຫ້ນ້ຳພຸຂອງເຈົ້າໄດ້ຮັບພອນ ແລະຂໍໃຫ້ຄວາມຊື່ນຊົມຍິນດີຢູ່ກັບເມຍຄົນທີ່ເຈົ້າໄດ້ເມື່ອຍັງເປັນບ່າວນັ້ນ,[19]ເພາະນາງຄືກວາງທີ່ຫນ້າຮັກ
ແລະຄືກວາງໂຕແມ່ທີ່ງາມສະຫງ່າ. ຈົ່ງໃຫ້ຫນ້າເອິກທັງສອງຂ້າງຂອງນາງເປັນທີ່ເບີກບານໃຈຂອງເຈົ້າຢູ່ທຸກເວລາ;
ຂໍໃຫ້ເຈົ້າຈົ່ງຈັບໃຈຢູ່ກັບຄວາມຮັກຂອງນາງຢູ່ສະເຫມີ.
[20]ລູກຊາຍຂອງເຮົາເອີຍ, ເປັນຫຍັງເຈົ້າຈະເພີດເພີນຢູ່ກັບຍິງແພດສະຫຍາຢູ່; ເປັນຫຍັງເຈົ້າໂອບກອດຫາຄວາມສຸກກັບເມຍຂອງຊາຍອື່ນ?
[21]ພຣະຢາເວຊົງທອດພຣະເນດທຸກສິ່ງທີ່ບຸກຄົນເຮັດ ແລະພຣະອົງຊົງເຝົ້າເບິ່ງຫົນທາງທັງຫມົດຂອງເຂົາ.
[22]ບຸກຄົນອະທຳຈະຖືກດັກດ້ວຍຄວາມຊົ່ວຮ້າຍຂອງຕົວເຂົາເອງ; ກັບດັກແຫ່ງບາບຂອງເຂົາກໍເກາະຕິດເຂົາຈົນແຫນ້ນ.
[23]ເຂົາຈະຕາຍເພາະເຂົາຂາດການສັ່ງສອນ; ເຂົາຫລົງໄປເພາະຄວາມໂງ່ທັງຫລາຍຂອງເຂົາ.


generated on Tue Jun 17 19:01:42 2025

6 [1]ລູກຊາຍຂອງເຮົາເອີຍ, ຖ້າເຈົ້າເປັນຜູ້ຄ້ຳປະກັນການຢືມເງິນໃຫ້ເພື່ອນບ້ານຂອງເຈົ້າ, ຖ້າເຈົ້າໄດ້ໃຫ້ສັນຍາກັບຄົນແປກໜ້າ,
[2]ແລ້ວຖ້າເຈົ້າໄດ້ຕິດບ່ວງເພາະຄຳສັນຍາຂອງເຈົ້າ ແລະ ເຈົ້າຈະຖືກຈັບດ້ວຍເພາະຄຳເວົ້າທີ່ອອກຈາກປາກຂອງເຈົ້າ.

[3]ເມື່ອເຈົ້າຕິດກັບເພາະຄຳຈາກປາກຂອງເຈົ້າ, ລູກຊາຍຂອງເຮົາເອີຍ, ຈົ່ງເຮັດແບບນີ້ ແລະຊ່ວຍຕົວເຈົ້າໃຫ້ພົ້ນໄພ,
ເມື່ອເຈົ້າຕົກຢູ່ໃນກຳມືເພື່ອນບ້ານຂອງເຈົ້າ; ຈົ່ງໄປ ແລະ ຖ່ອມຕົວລົງ ແລະວິງວອນຕໍ່ໜ້າເພື່ອນບ້ານຂອງເຈົ້າ.
[4]ຢ່າໃຫ້ດວງຕາທັງສອງຂ້າງຂອງເຈົ້າຫລັບລົງ ແລະຢ່າໃຫ້ໜັງຕາຂອງເຈົ້າເລື່ອນລອຍໄປ.
[5]ຈົ່ງໃຫ້ຕົວຂອງເຈົ້າປອດໄພຄືກວາງຫລີກໂຕຈາກມືຂອງນາຍພານ, ຄືນົກຈາກມືຂອງຄົນຈັບນົກ.
[6]ເຈົ້າຄົນຂີ້ຄ້ານ, ຈົ່ງໄປເບິ່ງມົດແມ, ວິເຄາະເບິ່ງທາງຂອງມັນ, ແລະ ຈົ່ງມີປັນຍາ.[7]ໂດຍປາສະຈາກຫົວໜ້າ, ເຈົ້າໜ້າທີ່, ຫລື ຜູ້ປົກຄອງ,
[8]ມັນກໍຍັງຕຽມອາຫານຂອງມັນໃນລະດູຮ້ອນ ແລະ ໃນລະຫວ່າງລະດູເກັບກ່ຽວມັນສະສົມສະບຽງຂອງມັນ.
[9]ເຈົ້າຈະນອນຫລັບອີກດົນປານໃດ, ຄົນຂີ້ຄ້ານເອີຍ? ປານໃດເຈົ້າຈະລຸກຂຶ້ນຈາກຫລັບຂອງເຈົ້າ?[10]"ຫລັບອີກໜ້ອຍໜຶ່ງ, ເພີ້ມອີກໜ້ອຍໜຶ່ງ,
ກອດມືໜ້ອຍໜຶ່ງເພື່ອພັກຜ່ອນ"[11]ແລະ ຄວາມທຸກຂອງເຈົ້າຈະມາຄືໂຈນ ແລະຄວາມຂັດສົນຂອງເຈົ້າຈະມາຢ່າງທະຫານຖືອາວຸດ.
[12]ຄືຄົນບໍ່ມີຄຸນຄ່າ - ຄົນຊົ່ວ - ທີ່ໃຊ້ຊີວິດດ້ວຍຄຳເວົ້າມັກໄປຫາຕົວະ,[13]ຂະຫຍິບດວງຕາຂອງເຂົາ, ໃຫ້ສັນຍາດ້ວຍຕີນຂອງເຂົາ
ແລະນິ້ວຂອງເຂົາກໍຊີ້ໄປ.
[14]ເຂົາຄິດປະດິດຄວາມຊົ່ວຮ້າຍໃນໃຈຂອງເຂົາ; ເຂົາຄິດເປີເປື້ອນສ້າງຄວາມເດືອດຮ້ອນຢູ່ທຸກເວລາ.
[15]ເພາະສະນັ້ນຄວາມຫາຍຍະນະຈະມາຮອດເຂົາຢ່າງກະທັນຫັນ; ພຽງອຶດໃຈເຂົາຈະຖືກທຳລາຍໂດຍບໍ່ມີທາງບັນເທົາ.
[16]ມີຫົກຢ່າງຊຶ່ງພຣະຢາເວຊົງຊັງ, ມີເຈັດສິ່ງຊຶ່ງເປັນທີ່ໜ້າລັງກຽດສຳລັບພຣະອົງ.
[17]ໄດ້ແກ່ ດວງຕາຂອງບຸກຄົນທີ່ຍິ່ງຍະໂສ, ລີ້ນທີ່ກ່າວຄຳຕົວະ, ມືທັງຫລາຍທີ່ເຮັດໃຫ້ເລືອດຂອງຄົນບໍລິສຸດຕ້ອງໄຫລອອກ,
[18]ໃຈທີ່ຄິດແຜນຊົ່ວຮ້າຍ, ຕີນທັງສອງຂ້າງຊຶ່ງຟ້າວແລ່ນໄປເຮັດຊົ່ວ,[19]ພະຍານທີ່ຫາຍໃຈອອກມາເປັນຄຳຕົວະ ແລະ
ຄົນທີ່ຫວ່ານຄວາມແຕກແຍກໃນໝູ່ພີ່ນ້ອງ.
[20]ລູກຊາຍຂອງເຮົາເອີຍ, ຈົ່ງເຝົ້າຮັກສາບັນຍັດຂອງພໍ່ຂອງເຈົ້າ ແລະຢ່າປະຖິ້ມຄຳສອນຂອງແມ່ຂອງເຈົ້າ.
[21]ຈົ່ງມັດສິ່ງເຫລົ່ານັ້ນໄວ້ທີ່ໃຈຂອງເຈົ້າສະເໝີ; ຈົ່ງຜູກສິ່ງເຫລົ່ານັ້ນໄວ້ອ້ອມຄໍຂອງເຈົ້າ.
[22]ເມື່ອເຈົ້າຍ່າງ, ພວກມັນຈະນຳເຈົ້າ; ເມື່ອເຈົ້ານອນຫລັບ, ພວກມັນຈະເຝົ້າເຈົ້າ; ແລະ ເມື່ອເຈົ້າຕື່ນ, ພວກມັນຈະສອນເຈົ້າ.
[23]ເພາະບັນຍັດເປັນການດຳເນີນຊີວິດ, ແລະ ຄຳສອນເປັນແສງສະຫວ່າງເຍືອງທາງ; ການແກ້ໄຂທີ່ມາດ້ວຍການສັ່ງສອນເປັນວິຖີທາງແຫ່ງຊີວິດ.
[24]ມັນປົກປ້ອງເຈົ້າໄວ້ຈາກຍິງຊົ່ວຮ້າຍໄດ້, ຈາກຄຳເວົ້າອັນລໍ້ລວງຂອງຍິງແພດສະຫຍາ.[25]ຢ່າໃຫ້ໃຈຂອງເຈົ້າຫລົງສະເໜ່ຄວາມງາມຂອງນາງ
ແລະຢ່າໃຫ້ນາງຈັບເຈົ້າດ້ວຍຕາເຈົ້າຊູ້ຂອງນາງ.
[26]ຫລັບນອນກັບຍິງໂສເພນີ ດ້ວຍຄ່າຈ້າງເທົ່າກັບເຂົ້າຈີ່ກ້ອນດຽວກໍຍັງໄດ້,
ແຕ່ຫລັບນອນກັບເມຍຂອງຜູ້ຊາຍອີກຄົນໜຶ່ງອາດຈະຕ້ອງຊື້ດ້ວຍຊີວິດຂອງເຈົ້າ.[27]ຄົນເຮົາຈະຫອບໄຟໄວ້ທີ່ໜ້າເອິກຂອງເຂົາ
ໂດຍບໍ່ໃຫ້ເສື້ອຜ້າໄໝ້ໄດ້ບໍ?
[28]ຄົນເຮົາຈະຍ່າງເທິງຖ່ານທີ່ຮ້ອນໂດຍບໍ່ໃຫ້ຕີນທັງສອງຂ້າງຖືກໄຟລວກໄດ້ບໍ?
[29]ດັ່ງນັ້ນຜູ້ຊາຍທີ່ຫລັບນອນກັບເມຍຂອງເພື່ອນບ້ານກໍເປັນດັ່ງນັ້ນແຫລະ; ບໍ່ມີໃຜທີ່ຈະຫລັບນອນກັບນາງແລ້ວຈະບໍ່ຖືກລົງໂທດ.
[30]ປະຊາຊົນບໍ່ດູຖູກຂີ້ລັກ ຖ້າເຂົາລັກເຄື່ອງເພື່ອບັນເທົາຄວາມຢາກເມື່ອເຂົາຫິວ.[31]ແມ່ນແຕ່ຖ້າເຂົາຖືກຈັບໄດ້,
ເຂົາຕ້ອງສົ່ງຄືນເຈັດເທົ່າທີ່ເຂົາໄດ້ລັກໄປ; ເຂົາຈະຕ້ອງໃຫ້ສິ່ງຂອງທັງໝົດທີ່ມີຄ່າໃນບ້ານຂອງເຂົາ.
[32]ໃຜທີ່ລ່ວງປະເວນີ ຍ່ອມບໍ່ມີສາມັນສຳນຶກ; ໃຜເຮັດແບບນັ້ນກໍທຳຮ້າຍຕົນເອງ.[33]ເຂົາຈະໄດ້ບາດແຜ ແລະຄວາມອັບປະຍົດ
ຄືສິ່ງທີ່ເຂົາສົມຄວນຈະໄດ້ຮັບ ແລະຄວາມອົດທົນຂອງເຂົາຈະລົບລ້າງບໍ່ໄດ້ເລີຍ.
[34]ເພາະຄວາມຫຶງຫວງເຮັດໃຫ້ຜູ້ຊາຍໃຈຮ້າຍ; ເຂົາຈະບໍ່ສະແດງຄວາມເມດຕາ ເມື່ອເຂົາລົງມືແກ້ແຄ້ນ.[35]ເຂົາຈະບໍ່ຍອມຮັບຄ່າຊົດເຊີຍ
ແລະເຂົາຈະບໍ່ສາມາດຢັບຢັ້ງໄດ້, ເຖິງແມ່ນວ່າເຈົ້າຈະສະເໜີໃຫ້ຊັບສິນຫລວງຫລາຍກໍຕາມ.

7 [1]ລູກຊາຍຂອງເຮົາເອີຍ, ຈົ່ງຮັກສາຖ້ອຍຄຳຂອງພໍ່ ຈົ່ງສະສົມບັນຍັດຂອງພໍ່ໄວ້ກັບເຈົ້າ.[2]ຈົ່ງຮັກສາບັນຍັດຂອງພໍ່ ແລະມີຊີວິດຢູ່
ແລະຈົ່ງຮັກສາຄຳສອນຂອງພໍ່ ຄືກັບແກ້ວຕາຂອງເຈົ້າ.[3]ຈົ່ງພັນມັນໄວ້ທີ່ນິ້ວມືທັງຫລາຍຂອງເຈົ້າ;
ຈົ່ງຂຽນສິ່ງເຫລົ່ານີ້ໄວ້ເທິງແຜ່ນຈາລຶກແຫ່ງຫົວໃຈຂອງເຈົ້າ.

[4]ຈົ່ງເວົ້າກັບປັນຍາວ່າ, "ນາງເປັນເອື້ອຍຂອງຂ້ອຍ," ແລະຈົ່ງເອີ້ນຄວາມຮອບຮູ້ວ່າຍາດພີ່ນ້ອງທີ່ສະໜິດຂອງເຈົ້າ,
[5]ເພື່ອທີ່ຈະປົກປ້ອງຕົວເຈົ້າໄວ້ຈາກຍິງແພດສະຫຍາ, ຈາກຍິງຊົ່ວຮ້າຍເວົ້າຈາຕົວະຕົ້ມ.
[6]ທີ່ປະຕູປ່ອງຢ້ຽມເຮືອນຂອງເຮົາ ເຮົາໄດ້ກຳລັງເບິ່ງອອກໄປຜ່ານຕາໜ່າງໄມ້.[7]ເຮົາໄດ້ເບິ່ງໄປທີ່ຜູ້ຄົນທີ່ໂງ່ຈ້າ, ແລະ
ເຮົາສັງເກດເບິ່ງທ່າມກາງຊາຍໜຸ່ມທັງຫລາຍ ຄົນທີ່ບໍ່ມີສາມັນສຳນຶກ.
[8]ຄົນໜຸ່ມຄົນນັ້ນໄດ້ຜ່ານລົງໄປຕາມຫົນທາງໃກ້ຫົວມຸມບ້ານຂອງນາງ, ແລະ ເຂົາໄດ້ຍ່າງໄປທາງບ້ານຂອງນາງ.[9]ເປັນເວລາມືດຄຶ້ມ,
ໃນເວລາຕອນແລງ, ໃນຕອນກາງຄືນ ແລະ ໃນຄວາມມືດ.
[10]ບ່ອນນັ້ນ ຜູ້ຍິງຄົນໜຶ່ງໄດ້ມາເຫັນເຂົາ, ໄດ້ແຕ່ງໂຕຄືໂສເພນີ, ດ້ວຍຫົວໃຈອຸບາຍຫລອກລວງຄົນ.[11]ນາງແຕ່ງໂຕຢ່າງເລີດໂພ່ນ ແລະ
ຕາມໃຈຕົວເອງ; ຕີນຂອງນາງບໍ່ຢູ່ກັບບ້ານ.[12]ບັດນີ້ ຢູ່ທີ່ຫົນທາງ, ແລ້ວກໍໄປຢູ່ທີ່ຕະຫລາດ, ແລະ ນາງໄດ້ຢືນຄອຍຖ້າຢູ່ຕາມແຈທາງ.
[13]ດັ່ງນັ້ນນາງໄດ້ໂດດກອດລາວ ແລະ ໄດ້ຈູບລາວ, ນາງໄດ້ເວົ້າກັບລາວຢ່າງບໍ່ອາຍວ່າ,[14]"ຂ້ອຍໄດ້ຖວາຍເຄື່ອງສານບູຊາມື້ນີ້,
ຂ້ອຍໄດ້ຖວາຍແກ້ບະແລ້ວ,[15]ດັ່ງນັ້ນ ຂ້ອຍຈຶ່ງອອກມາພົບເຈົ້າ, ສະແຫວງຫາເຈົ້າຢ່າງໃຈຈົດໃຈຈໍ່, ແລະ ຂ້ອຍໄດ້ພົບເຈົ້າແລ້ວ.
[16]ຂ້ອຍໄດ້ຄຸມຕຽງຂອງຂ້ອຍແລ້ວດ້ວຍຜ້າຄຸມ, ເປັນຜ້າເລນິນຈາກເອຢິບ.
[17]ຂ້ອຍໄດ້ເຮັດໃຫ້ບ່ອນນອນຂອງຂ້ອຍຫອມດ້ວຍເຄື່ອງໄມ້ຫອມຕ່າງໆ.[18]ມາເຖີດ, ໃຫ້ເຮົາມາມີຄວາມສຸກນຳກັນຈົນຮອດຮຸ່ງເຊົ້າ;
ໃຫ້ເຮົາມາເພີດເພີນໃນຄວາມຮັກກັນຢ່າງເຕັມອີ່ມເຖີດ.
[19]ເພາະຜົວຂອງຂ້ອຍບໍ່ໄດ້ຢູ່ບ້ານຂອງເຂົາ; ເຂົາໄດ້ເດີນທາງໄປໄກ.[20]ເຂົາໄດ້ເອົາເງິນໄປໜຶ່ງຖົງ;
ເຂົາຈະກັບມາໃນວັນເພັງ."[21]ດ້ວຍຄຳເຊີນຊວນຫລວງຫລາຍ ນາງໄດ້ຫວາດລ້ອມເຂົາ; ນາງຊັກຈູງເຂົາດ້ວຍຄຳເວົ້າອ່ອນຫວານ.
[22]ເຂົາກໍໄດ້ຕິດຕາມນາງໄປທັນທີ ຄືງົວໂຕຜູ້ໄປສູ່ການຂ້າ, ຄືຢ່າງກວາງເຂົ້າໄປຕິດກັບດັກ,[23]ຈົນລູກທະນູປັກລົງເລິກຮອດຕັບຂອງມັນ.
ເຂົາເປັນຄືນົກເຂົ້າໄປຫາບ່ວງ. ເຂົາບໍ່ຮູ້ວ່ານັ້ນມີລາຄາຮອດຊີວິດຂອງເຂົາ ລູກຊາຍທັງຫລາຍເອີຍ.
[24]ບັດນີ້, ລູກຊາຍຂອງເຮົາ, ຈົ່ງຟັງເຮົາເທີດ; ແລະ ຈົ່ງໃສ່ໃຈຖ້ອຍຄຳຈາກປາກຂອງເຮົາ.[25]ຢ່າໃຫ້ໃຈຂອງເຈົ້າຫັນໄປຕາມທາງຂອງນາງ;
ຢ່າຫລົງຢູ່ໃນວິຖີຂອງນາງ.
[26]ນາງໄດ້ເຮັດໃຫ້ປະຊາຊົນເປັນຫລວງຫລາຍລົ້ມລົງຢ່າງໂຫດຮ້າຍ; ເຫຍື່ອແຫ່ງຄວາມຕາຍຂອງນາງກໍຫລວງຫລາຍນັບບໍ່ຖ້ວນ.
[27]ບ້ານຂອງນາງເປັນທາງໄປສູ່ແດນຄວາມຕາຍ; ພວກເຂົາລົງໄປຮອດຫ້ອງນອນມືດທຶບແຫ່ງຄວາມຕາຍ.

 generated on Tue Jun 17 19:01:42 2025

# 8

[1]ປັນຍາບໍ່ໄດ້ຮຽກຮ້ອງບໍ? ຄວາມເຂົ້າໃຈບໍ່ໄດ້ເປັ່ງສຽງຂອງນາງບໍ?[2]ເທິງຍອດພູສູງ ບ່ອນຂ້າງທາງ, ແລະຕາມສີ່ແຍກ, ປັນຍາໄດ້ຢືນຢູ່.
[3]ທັງທາງຫນ້າປະຕູຫນ້າເມືອງທັງຫລາຍ, ຄືບ່ອນທາງເຂົ້າທັງຫລາຍ, ປັນຍາໄດ້ຮ້ອງສຽງດັ່ງວ່າ.

[4]"ນີ້ແມ່ນສໍາລັບເຈົ້າ, ປະຊາຊົນເອີຍ, ເຮົາເອີ້ນເຈົ້າ; ສຽງເອີ້ນຂອງເຮົາໄປຮອດເຫລົ່າລູກຂອງມະນຸດປະຊາຊາດ.[5]ເຈົ້າຄົນຜູ້ຊື່ໆຮູ້ຫນ້ອຍ,
ຈົ່ງຮຽນຮູ້ປັນຍາ; ແລະ ເຈົ້າຄົນໂງ່, ເຈົ້າຕ້ອງໃຫ້ມີຄວາມເຂົ້າໃຈ.
[6]ຈົ່ງຟັງ, ເພາະເຮົາຈະເວົ້າເຖິງສິ່ງທີ່ມີກຽດ, ແລະເມື່ອປາກຂອງເຮົາເປີດອອກ ເຮົາຈະເວົ້າສິ່ງທີ່ຖືກຕ້ອງ.[7]ເພາະປາກຂອງເຮົາຈະເວົ້າຄວາມຈິງ,
ແລະຄວາມຊົ່ວເປັນສິ່ງທີ່ຫນ້າລັງກຽດຫນ້າຊັງຕໍ່ປາກຂອງເຮົາ.
[8]ທຸກຄໍາຈາກປາກຂອງເຮົານັ້ນຊອບທໍາ; ໃນຖ້ອຍຄໍາເຫລົ່ານັ້ນບໍ່ບິດເບືອນ ຫລືເວົ້າໄປເວົ້າມາ.[9]ຄໍາເຫລົ່ານັ້ນກໍຖືກຫມົດ ສໍາລັບບຸກຄົນທີ່ເຂົ້າໃຈ;
ຖ້ອຍຄໍາຂອງເຮົາກໍຖືກຕ້ອງສໍາລັບຜູ້ພົບຄວາມຮູ້.
[10]ຈົ່ງຮັບຄໍາສັ່ງສອນຂອງເຮົາແທນເງິນ; ແລະຈົ່ງຮັບຄວາມຮູ້ແທນທອງຄໍາເນື້ອດີ.[11]ເພາະປັນຍາດີກວ່າເພັດພອຍ;
ບໍ່ມີຊັບສົມບັດໃດຈະເທົ່າຫຽມກັບປັນຍາໄດ້ເລີຍ.
[12]ເຮົາເອງ, ຄືປັນຍາ, ຢູ່ກັບຄວາມສຸຂຸມ, ແລະເຮົາເປັນເຈົ້າຂອງຄວາມຮູ້ ແລະຄວາມສະຫລາດ.
[13]ຄວາມຢໍາເກງພຣະຢາເວຄືການກຽດຊັງຄວາມຊົ່ວຮ້າຍ. ເຮົາຊັງຄວາມເຢີ່ຫຍິ່ງ, ແລະຄວາມຈອງຫອງ,
ແລະທາງຂອງຄວາມຊົ່ວຮ້າຍກັບຄໍາເວົ້າກັບໄປກັບມາ. ເຮົາຊັງພວກນີ້.
[14]ເຮົາມີຄໍາແນະນໍາທີ່ດີ ແລະ ສະຕິປັນຍາທີ່ຫລັກແຫລມ; ເຮົາເອງເປັນຄວາມຮອບຮູ້; ກໍາລັງກໍເປັນຂອງເຮົາ.[15]ໂດຍເຮົາເອງ
ກະສັດທັງຫລາຍຈຶ່ງໄດ້ປົກຄອງ - ລວມທັງເຫລົ່າຂຸນນາງ, ແລະ ຄົນທັງຫມົດທີ່ປົກຄອງຢ່າງຍຸດຕິທໍາ.[16]ໂດຍເຮົາເອງ, ເຈົ້ານາຍຈຶ່ງປົກຄອງ,
ຂຸນນາງທັງຫລາຍ, ແລະ ທຸກຄົນທີ່ປົກຄອງຢ່າງຍຸດຕິທໍາ.
[17]ເຮົາຮັກຄົນເຫລົ່ານີ້ທີ່ຮັກເຮົາ, ແລະ ຄົນເຫລົ່ານັ້ນທີ່ສະແຫວງຫາເຮົາຢ່າງຕັ້ງໃຈ, ກໍຈະພົບເຮົາ.[18]ຄວາມຮັ່ງມີ ແລະ ກຽດສັກສີຢູ່ກັບເຮົາ,
ທັງຊັບສິນນິລັນ ແລະ ຄວາມຊອບທໍາ.
[19]ຜົນຂອງເຮົາກໍດີກວ່າທອງຄໍາ, ດີກວ່າທອງຄໍາບໍຣິສຸດ; ແລະຜົນຜະລິດຂອງເຮົາກໍດີກວ່າເງິນເນື້ອດີ.[20]ເຮົາຍ່າງໃນທາງແຫ່ງຄວາມຊອບທໍາ,
ໃນທ່າມກາງວິຖີແຫ່ງຄວາມຍຸດຕິທໍາ.[21]ຜົນທີ່ເກີດຂຶ້ນ, ເຮົາໃຫ້ຄົນເຫລົ່ານັ້ນທີ່ເຮົາຮັກໄດ້ຄອບຄອງຊັບສິນ;
ເຮົາຈະບັນຈຸຄັງເງິນຂອງພວກເຂົາໃຫ້ເຕັມ.
[22]ພຣະຢາເວຊົງໃຫ້ກໍາເນີດເຮົາ ເມື່ອຊົງເລີ່ມງານຂອງພຣະອົງ, ເຮົາເປັນສິ່ງທໍາອິດໃນພຣະຣາຊກິດຂອງພຣະອົງ.[23]ຕັ້ງແຕ່ດົນນານມາແລ້ວ,
ເຮົາໄດ້ຖືກແຕ່ງຕັ້ງໄວ້ ຈາກເມື່ອສະໄຫມການເລີ່ມຕົ້ນຂອງແຜ່ນດິນໂລກ.
[24]ກ່ອນມີມະຫາສະຫມຸດ ກ່ອນມີຕານໍ້າທີ່ນໍ້າໄຫລຫລວງຫລາຍ, ເຮົາໄດ້ຖືກໍາເນີດມາແລ້ວ.[25]ກ່ອນພູເຂົາທັງຫລາຍຖືກວາງຮາກລົງ
ແລະກ່ອນເນີນພູທັງປວງ, ເຮົາກໍໄດ້ຖືກໍາເນີດມາແລ້ວ.
[26]ເຮົາໄດ້ເກີດມາແລ້ວກ່ອນທີ່ພຣະຢາເວໄດ້ສ້າງແຜ່ນດິນຫລືໄຮ່ນາ, ຫລືກ່ອນຜົງຂີ້ດິນທໍາອິດຂອງໂລກ.[27]ເຮົາໄດ້ຢູ່ທີ່ນັ້ນແລ້ວ
ເມື່ອພຣະອົງໄດ້ຊົງສ້າງຟ້າສະຫວັນ, ເມື່ອຊົງລາກເສັ້ນຮອບວົງເທິງພື້ນຜີວຂອງບ່ອນເລິກ.
[28]ເຮົາໄດ້ຢູ່ທີ່ນັ້ນເມື່ອພຣະອົງໄດ້ຊົງສະຖາປານາເມກເບື້ອງເທິງ ແລະຊົງສະຖາປານາຕານໍ້າພຸຂຶ້ນມາຈາກບ່ອນເລິກ.
[29]ເຮົາໄດ້ຢູ່ທີ່ນັ້ນເມື່ອພຣະອົງຊົງກໍານົດຂອບເຂດໃຫ້ທະເລ, ເພື່ອວ່ານໍ້າຈະບໍ່ລະເມີດພຣະບັນຊາຂອງພຣະອົງ,
ແລະເມື່ອຊົງມີການຈໍາກັດສໍາລັບປັກຮາກຖານຂອງແຜ່ນດິນແຫ້ງ.
[30]ເຮົາກໍໄດ້ຢູ່ຂ້າງພຣະອົງແລ້ວ, ຄືຢ່າງນາຍຊ່າງທີ່ຊໍານານ; ເຮົາເປັນຄວາມຊົມຊື່ນຍິນດີຂອງພຣະອົງທຸກໆມື້,
ມີສຸກທຸກເວລາສະເພາະຫນ້າພຣະພັກພຣະອົງ.[31]ເຮົາກໍາລັງມີຄວາມສຸກໃນໂລກຂອງພຣະອົງທັງຫມົດ, ແລະ
ຄວາມຊົມຊື່ນຍິນດີຂອງເຮົາໃນລູກທັງຫລາຍຂອງມະນຸດປະຊາຊາດ.
[32]ບັດນີ້, ລູກຊາຍທັງຫລາຍຂອງເຮົາເອີຍ, ຈົ່ງຟັງເຮົາ, ສໍາລັບຄົນທັງຫລາຍທີ່ຮັກສາທາງຂອງເຮົາກໍເປັນສຸກ.[33]ຈົ່ງຟັງຄໍາສັ່ງສອນຂອງເຮົາ
ແລະຈົ່ງມີປັນຍາ; ແລະຢ່າລະເລີຍ.[34]ຄົນທີ່ຟັງເຮົາກໍເປັນສຸກ. ເຂົາຈະເຝົ້າຢູ່ທີ່ປະຕູທັງຫລາຍຂອງເຮົາທຸກມື້,
ຖ້າຢູ່ຂ້າງເສົາປະຕູບ້ານທັງຫລາຍຂອງເຮົາ.
[35]ເພາະໃຜກໍຕາມທີ່ພົບເຮົາ, ກໍພົບຊີວິດ, ແລະເຂົາຈະໄດ້ຄວາມຊື່ນຊອບຈາກພຣະຢາເວ.[36]ແຕ່ຄົນທີ່ບໍ່ພົບເຮົາກໍທໍາຮ້າຍຊີວິດຂອງຕົວເອງ;
ທຸກຄົນທີ່ຊັງເຮົາກໍຮັກຄວາມຕາຍ."

 generated on Tue Jun 17 19:01:42 2025

9 1ປັນຍາໄດ້ສ້າງບ້ານຂອງນາງແລ້ວ; ນາງໄດ້ແກະສະຫລັກເສົາເຈັດຕົ້ນຈາກຫີນ. 2ນາງໄດ້ຂ້າສັດຂອງນາງ;
ນາງໄດ້ປະສົມເຫລົ້າອະງຸ່ນຂອງນາງ; ແລະນາງໄດ້ຈັດໂຕະຂອງນາງໄວ້ແລ້ວ.

3ນາງໄດ້ສາວໃຊ້ຂອງນາງອອກໄປ; ນາງໄດ້ຮ້ອງ ຈາກທີ່ສູງທີ່ສຸດໃນເມືອງວ່າ, 4"ໃຜເປັນຄົນທີ່ຮູ້ຫນ້ອຍ? ໃຫ້ເຂົາຫັນເຂົ້າມາບ່ອນນີ້!"
ນາງເວົ້າກັບຜູ້ທີ່ບໍ່ມີສາມັນສຳນຶກວ່າ.
5"ມາເຖີດ, ມາກິນເຂົ້າຈີ່ຂອງຂ້ອຍ, ແລະດື່ມເຫລົ້າອະງຸ່ນທີ່ຂ້ອຍໄດ້ຜະສົມ. 6ຈົ່ງປະຖິ້ມການກະທຳທີ່ຮູ້ຫນ້ອຍສາ;
ແລະມີຊີວິດຢູ່ດຳເນີນໃນທາງຂອງຄວາມຮອບຮູ້ນັ້ນເຖີດ.
7ຜູ້ໃດກໍຕາມທີ່ກ່າວວ່າຄົນທີ່ມັກເຢາະເຢີ້ຍຈະໄດ້ຄວາມອັບປະຍົດ, ແລະຜູ້ໃດກໍຕາມທີ່ຕັກເຕືອນຄົນອະທຳຈະໄດ້ຮັບການດູຖູກ.
8ຢ່າຕັກເຕືອນຄົນມັກເຢາະເຢີ້ຍ, ເພາະເຂົາຈະຊັງເຈົ້າ. 9ຈົ່ງໃຫ້ໂອກາດແກ່ຄົນມີປັນຍາ, ແລະເຂົາຈະມີປັນຍາຫລາຍຂຶ້ນ,
ແລະຈົ່ງສອນຄົນຊອບທຳ ແລະເຂົາຈະເພີ່ມພູນໃນການຮຽນຮູ້.
10ຄວາມຢຳເກງພຣະຢາເວເປັນທີ່ເລີ່ມຕົ້ນຂອງປັນຍາ, ແລະຄວາມຮູ້ເລື່ອງອົງບໍຣິສຸດເປັນຄວາມຮອບຮູ້. 11ເພາະໂດຍເຮົາ
ວັນທັງຫລາຍຂອງເຈົ້າຈະທະວີຂຶ້ນ, ແລະປີທັງຫລາຍແຫ່ງຊີວິດຂອງເຈົ້າຈະເພີ່ມພູນ. 12ຖ້າເຈົ້າມີປັນຍາ, ເຈົ້າກໍມີປັນຍາເພື່ອຕົນເອງ,
ແລະຖ້າເຈົ້າເຢາະເຢີ້ຍ, ເຈົ້າເອງນັ້ນແຫລະກໍຈະຕ້ອງແບກຮັບພຽງຄົນດຽວ."
13ຜູ້ຍິງໂງ່ນັ້ນກໍເປັນດັ່ງແມ່ຍິງທີ່ມັກຈົ່ມວ່າ; ນາງອັບປັນຍາ ແລະບໍ່ຮູ້ຫຍັງເລີຍ. 14ນາງນັ່ງຢູ່ບ່ອນປະຕູບ້ານຂອງນາງ,
ເທິງບ່ອນນັ່ງຕາມບ່ອນສູງຂອງເມືອງ. 15ນາງໄດ້ເອີ້ນຄົນເຫລົ່ານັ້ນ ຜູ້ທີ່ຜ່ານໄປຕາມຫົນທາງ,
ແກ່ປະຊາຊົນທີ່ຍ່າງຊື່ໄປຕາມທາງຂອງພວກເຂົາວ່າ.
16"ໃຫ້ໃຜກໍຕາມທີ່ເປັນຄົນຮູ້ຫນ້ອຍ ໃຫ້ເຂົາຫລຽວເຂົ້າມາບ່ອນນີ້," ນາງເວົ້າກັບຄົນເຫລົ່ານັ້ນທີ່ໂງ່ຈ້າວ່າ. 17"ນ້ຳທີ່ລັກມາລົດຊາດກໍຫວານ,
ແລະອາຫານທີ່ກິນໃນບ່ອນລັບໆກໍແຊບ." 18ແຕ່ເຂົາບໍ່ຮູ້ວ່າຄົນຕາຍຢູ່ບ່ອນນັ້ນ,
ແລະແຂກທີ່ໄດ້ຮັບເຊີນຂອງນາງກໍຢູ່ໃນວັງເລິກຂອງແດນຄົນຕາຍ.

 generated on Tue Jun 17 19:01:42 2025

# 10

[1]ບັນດາສຸພາສິດຂອງໂຊໂລໂມນ. ລູກຊາຍທີ່ມີປັນຍາເຮັດໃຫ້ພໍ່ຍິນດີ ແຕ່ລູກຊາຍທີ່ໂງ່ນຳຄວາມໂສກເສົ້າມາສູ່ແມ່ຂອງເຂົາ.
[2]ບັນດາຊັບສິນທີ່ໄດ້ສະສົມໂດຍຄົນອະທຳບໍ່ມີຄ່າ, ແຕ່ການເຮັດສິ່ງທີ່ຊອບທຳເຮັດໃຫ້ເຈົ້າໄດ້ພົ້ນຈາກຄວາມຕາຍ.
[3]ພຣະຢາເວຈະບໍ່ຊົງປ່ອຍໃຫ້ຈິດໃຈຂອງຄົນຊອບທຳຫິວກະຫາຍ, ແຕ່ພຣະອົງຈະຊົງປະຕິເສດຄວາມກະຫາຍຂອງຄົນອະທຳ.

[4]ມືທີ່ຂີ້ຄ້ານເຮັດໃຫ້ບຸກຄົນຍາກຈົນ, ແຕ່ມືຂອງບຸກຄົນທີ່ດຸຫມັ່ນຂະຫຍັນພຽນເຮັດໃຫ້ຮັ່ງມີ.[5]ລູກຊາຍທີ່ສະຫລາດກໍ່ເກັບພືດຜົນໄວ້ໃນລະດູແລ້ງ,
ແຕ່ເປັນສິ່ງທີ່ຫນ້າອັບອາຍແກ່ເຂົາ ຖ້າເຂົານອນຫລັບໃນລະດູເກັບກ່ຽວ.
[6]ພຣະພອນຫລວງຫລາຍຂອງພຣະເຈົ້າຢູ່ເທິງຫົວຂອງບຸກຄົນຊອບທຳ, ແຕ່ປາກຂອງຄົນອະທຳກໍ່ເຊື່ອງຄວາມໂຫດຮ້າຍ.
[7]ບຸກຄົນຊອບທຳເປັນເຫດໃຫ້ຄົນເຫລົ່ານັ້ນທີ່ລະລຶກເຖິງເຂົາມີຄວາມສຸກ, ແຕ່ຊື່ຂອງຄົນອະທຳຈະເສື່ອມເສຍ.
[8]ຄົນເຫລົ່ານັ້ນທີ່ມີປັນຍາຈະຍອມຮັບບັນຍັດທັງຫລາຍ, ແຕ່ຄົນທີ່ເວົ້າໂງ່ໆ ຈະເຖິງຄວາມພິນາດ.
[9]ຄົນທີ່ດຳເນີນໃນຄວາມຊື່ສັດກໍ່ດຳເນີນຢ່າງປອດໄພ, ແຕ່ຜູ້ທີ່ເຮັດທາງຂອງເຂົາໃຫ້ຄົດໂຄ້ງ, ເຂົາກໍ່ຈະຖືກເປີດເຜີຍ.
[10]ຜູ້ທີ່ປົກປິດຄວາມຈິງກໍ່ກໍ່ຄວາມຫຍຸ້ງຍາກ, ແຕ່ຜູ້ທີ່ຕັກເຕືອນຢ່າງກ້າຫານຈະສ້າງສັນຕິພາບ.[11]ປາກຂອງບຸກຄົນຊອບທຳເປັນນ້ຳພຸແຫ່ງຊີວິດ,
ແຕ່ປາກຂອງຄົນອະທຳເຊື່ອງຄວາມໂຫດຮ້າຍ.
[12]ຄວາມກຽດຊັງສ້າງໃຫ້ເກີດຄວາມເດືອດຮ້ອນຜິດຖຽງກັນ, ແຕ່ຄວາມຮັກກໍ່ປິດບັງການລະເມີດທຸກຢ່າງ.[13]ປັນຍາຈະເຫັນໄດ້ທີ່ຮິມປາກ
ຂອງບຸກຄົນທີ່ມີຄວາມເຂົ້າໃຈ, ແຕ່ໄມ້ແສ້ກໍ່ເຫມາະສົມສຳລັບຫລັງຂອງຄົນໂງ່ຈ້າ.
[14]ຄົນມີປັນຍາກໍ່ສະສົມຄວາມຮູ້ໄວ້, ແຕ່ປາກຂອງຄົນໂງ່ນຳຄວາມເດືອດຮ້ອນມາໃກ້.[15]ຊັບສົມບັດຂອງຄົນຮັ່ງມີ ເປັນເມືອງເຂັ້ມແຂງຂອງເຂົາ;
ແຕ່ຄວາມຍາກຈົນຂອງຄົນທຸກເປັນຄວາມເດືອດຮ້ອນຂອງພວກເຂົາ.
[16]ຄ່າຈ້າງຂອງບຸກຄົນຊອບທຳນຳໄປເຖິງຊີວິດ; ແຕ່ກຳໄລຂອງຄົນອະທຳນຳພວກເຂົາໄປສູ່ຄວາມບາບ.
[17]ມີວິຖີທາງໄປສູ່ຊີວິດສຳລັບຄົນທີ່ມີລະບຽບວິໄນ, ແຕ່ຄົນທີ່ປະຕິເສດຄຳຕັກເຕືອນກໍ່ຫລົງຜິດໄປ.
[18]ໃຜກໍ່ຕາມທີ່ເຊື່ອງຄວາມກຽດຊັງໄວ້ກໍ່ມີຮິມປາກທີ່ຂີ້ຕົວະ, ແລະໃຜກໍ່ຕາມທີ່ໃສ່ຮ້າຍປ້າຍສີຄົນອື່ນກໍ່ເປັນຄົນໂງ່.[19]ເມື່ອມີການເວົ້າຫລາຍຄຳ,
ການລະເມີດກໍ່ເກີດຂຶ້ນໄດ້, ແຕ່ຄົນທີ່ລະມັດລະວັງປາກໃນສິ່ງທີ່ເຂົາເວົ້າ ກໍ່ເປັນຄົນສະຫລາດ.
[20]ລີ້ນຂອງບຸກຄົນຊອບທຳຄືເງິນເນື້ອດີ; ມີຄຸນຄ່າພຽງເລັກຫນ້ອຍໃນຄວາມຄິດຂອງຄົນອະທຳ.[21]ຮິມປາກຂອງຄົນຊອບທຳລ້ຽງຄົນຫລວງຫລາຍ,
ແຕ່ຄົນໂງ່ຕາຍເພາະການຂາດສາມັນສຳນຶກຂອງພວກເຂົາ.
[22]ພຣະພອນຂອງພຣະຢາເວເຮັດໃຫ້ຮັ່ງມີ ແລະພຣະອົງບໍ່ໄດ້ຊົງເພີ່ມຄວາມໂສກເສົ້າເຂົ້າກັບພຣະພອນ.
[23]ຄວາມອະທຳເປັນການລະຫລິ້ນທີ່ຄົນໂງ່ຫລິ້ນເພື່ອຄວາມມ່ວນຊື່ນ, ແຕ່ປັນຍາກໍ່ເປັນຄວາມເພີດເພີນຂອງຄົນທີ່ມີຄວາມເຂົ້າໃຈ.
[24]ຄວາມຢ້ານຂອງຄົນອະທຳຈະມາຮອດເຂົາ, ແຕ່ຜູ້ຊອບທຳທັງຫລາຍຈະໄດ້ຮັບຕາມໃຈປາຖະຫນາ.
[25]ຄົນອະທຳເປັນຄືພາຍຸຫມຸນທີ່ຜ່ານໄປແລ້ວ, ແລະບໍ່ມີຄົນອະທຳອີກ, ແຕ່ບຸກຄົນຊອບທຳຈະມີຮາກຖານທີ່ຫມັ້ນຄົງຢູ່ຕະຫລອດໄປ.
[26]ຄືນ້ຳສົ້ມສາຍຊູກັບແຂ້ວ ແລະຄວັນໃນດວງຕາເປັນແນວໃດ, ຄົນກຽດຄ້ານກັບຜູ້ທີ່ໃຊ້ຜູ້ອື່ນກໍ່ເປັນແນວນັ້ນ.
[27]ຄວາມຢຳເກງພຣະຢາເວນັ້ນຍືດຊີວິດໃຫ້ຍາວ, ແຕ່ປີທັງຫລາຍຂອງຄົນອະທຳຈະສັ້ນເຂົ້າ.
[28]ຄວາມຫວັງຂອງປະຊາຊົນຊອບທຳ ຄືຄວາມຍິນດີຂອງພວກເຂົາ, ແຕ່ຈຳນວນປີຂອງຄົນອະທຳກໍ່ຈະສັ້ນເຂົ້າ.
[29]ທາງຂອງພຣະຢາເວເປັນທີ່ກຳບັງເຂັ້ມແຂງແກ່ຄົນທີ່ດຳເນີນຊີວິດແບບບໍ່ມີທີ່ຕິ, ແຕ່ເປັນຄວາມຫລົ້ມຈົມຂອງຄົນປະພຶດຊົ່ວ.
[30]ຄົນຊອບທຳຈະບໍ່ມີວັນຫວັ່ນໄຫວ, ແຕ່ຄົນອະທຳຈະບໍ່ໄດ້ຢູ່ໃນແຜ່ນດິນ.
[31]ສິ່ງທີ່ອອກຈາກປາກຂອງບຸກຄົນຊອບທຳ ໃຫ້ຜົນແຫ່ງປັນຍາ, ແຕ່ລີ້ນທີ່ເວົ້າສິ່ງບໍ່ຈິງຈະຖືກຕັດອອກ.[32]ຮິມປາກຂອງບຸກຄົນຊອບທຳ
ຮູ້ຈັກສິ່ງທີ່ດີທີ່ຄວນ, ແຕ່ປາກຂອງຄົນອະທຳ, ພວກເຂົາຮູ້ຈັກແຕ່ສິ່ງທີ່ບໍ່ຈິງ.

# 11

[1]ພຣະຢາເວຊິງກຽດຊັງຊິງຊິງຕົມຕຸນ, ແຕ່ພຣະອົງຊົງຊົມຊື່ນຍິນດີໃນນ້ຳຫນັກທີ່ທ່ຽງຕົງ.[2]ເມື່ອຄວາມອວດເກັ່ງມາຮອດ,
ຄວາມອັບປະຍົດກໍມານຳ, ແຕ່ຄວາມຖ່ອມຕົວມາພ້ອມກັບປັນຍາ.

[3]ຄວາມສັດຊື່ຂອງຄົນທ່ຽງທຳກໍຍ່ອມນຳພວກເຂົາ, ແຕ່ທຸກວິທີຕົວະຕົມຂອງຄົນຫັກຫລັງ ກໍທຳຮ້າຍພວກເຂົາ.
[4]ຄວາມຮັ່ງມີບໍ່ມີປະໂຫຍດໃນວັນແຫ່ງພຣະພິໂລດ, ແຕ່ການກະທຳທີ່ຊອບທຳຊ່ວຍໃຫ້ພົ້ນຈາກຄວາມຕາຍ.
[5]ຄວາມຊອບທຳຂອງຄົນທີ່ດີພ້ອມ ກໍເຮັດໃຫ້ທາງຂອງເຂົາຊື່ຕົງ, ແຕ່ຄົນອະທຳຈະລົ້ມລົງດ້ວຍຄວາມອະທຳຂອງພວກເຂົາເອງ.
[6]ການປະພຶດຄວາມຊອບທຳຂອງຄົນເຫລົ່ານັ້ນ ທີ່ພຣະເຈົ້າຊົງພໍພຣະໄທ ປົກປ້ອງພວກເຂົາໃຫ້ປອດໄພ,
ແຕ່ຄົນທີ່ຫັກຫລັງຈະຕິດກັບດັກຂອງຄວາມຢາກຂອງພວກເຂົາ.
[7]ເມື່ອຄົນອະທຳຕາຍ, ຄວາມຫວັງຂອງເຂົາກໍສະຫລາຍໄປ ແລະຄວາມຫວັງທີ່ໄດ້ເຄີຍມີຢູ່ ໃນກຳລັງຂອງເຂົາກໍສະຫລາຍໄປ.
[8]ບຸກຄົນຊອບທຳໄດ້ຮັບການຊ່ວຍເຫລືອໃຫ້ພົ້ນຈາກຄວາມລຳບາກ ແລະມັນຈະໄປຫາຄົນອະທຳແທນ.
[9]ປາກຂອງບຸກຄົນທີ່ບໍ່ນັບຖືພຣະເຈົ້າ ທຳຮ້າຍເພື່ອນບ້ານຂອງເຂົາ, ແຕ່ໂດຍທາງຄວາມຮູ້ຂອງປະຊາຊົນທີ່ຊອບທຳ ຈະຊ່ວຍໃຫ້ປອດໄພ.
[10]ເມື່ອປະຊາຊົນທີ່ຊອບທຳຢູ່ເຢັນເປັນສຸກ, ບ້ານເມືອງກໍຍິນດີ; ແລະເມື່ອຄົນອະທຳພິນາດ, ກໍມີສຽງໂຫ່ຮ້ອງດ້ວຍຄວາມຍິນດີ.
[11]ໂດຍພອນຂອງຄົນທີ່ຍິນດີໃນພຣະເຈົ້າ, ບ້ານເມືອງກໍເປັນທີ່ຍ້ອງຍໍ; ແຕ່ໂດຍປາກຂອງຄົນອະທຳ, ບ້ານເມືອງກໍຫລົ້ມຈົມ.
[12]ຄົນທີ່ດູຖູກເພື່ອນບ້ານຂອງເຂົາ ກໍບໍ່ມີສາມັນສຳນຶກ, ແຕ່ຄົນທີ່ມີຄວາມເຂົ້າໃຈກໍນັ່ງງຽບ.[13]ບຸກຄົນໃດກໍຕາມທີ່ທຽວໄປຊຸບຊິບນິນທາ
ກໍເປີດເຜີຍຄວາມລັບ, ແຕ່ຄົນທີ່ໄວ້ວາງໃຈໄດ້ ກໍປິດເລື່ອງໄວ້ໄດ້.
[14]ບ່ອນໃດບໍ່ມີການນຳພາທີ່ສະຫລາດ, ປະເທດກໍລົ້ມສະຫລາຍ, ແຕ່ໄຊຊະນະໄດ້ມາໂດຍມີທີ່ປຶກສາຫລາຍ.
[15]ບຸກຄົນໃດກໍຕາມ ທີ່ຄ້ຳປະກັນການກູ້ຢືມໃຫ້ຄົນອື່ນ ຈະຕ້ອງທົນທຸກ, ແຕ່ຜູ້ທີ່ຊັງການຄ້ຳປະກັນໃນສັນຍາເຊັ່ນນັ້ນ ກໍປອດໄພ.
[16]ຜູ້ຍິງທີ່ງາມສະຫງ່າກໍໄດ້ຮັບກຽດ, ແຕ່ປະຊາຊົນໃຈໂຫດຮ້າຍກໍລັກເອົາຄວາມຮັ່ງມີ.
[17]ບຸກຄົນທີ່ມີຄວາມເມດຕາກໍໃຫ້ປະໂຫຍດແກ່ຕົວເຂົາເອງ, ແຕ່ຄົນດຸຮ້າຍກໍເຮັດໃຫ້ໂຕເອງເຈັບ.[18]ບຸກຄົນອະທຳຫລອກຫລວງເພື່ອໄດ້ຄ່າຈ້າງ,
ແຕ່ຄົນທີ່ຫວ່ານສິ່ງທີ່ຊອບທຳ ຈະເກັບກ່ຽວຄ່າຈ້າງແຫ່ງຄວາມຈິງ.
[19]ບຸກຄົນທີ່ສັດຊື່ໃນຄວາມຊອບທຳຈະມີຊີວິດຢູ່, ແຕ່ຄົນທີ່ຕິດຕາມຄວາມຊົ່ວຮ້າຍຈະເຖິງຄວາມຕາຍ.
[20]ພຣະຢາເວຊົງກຽດຊັງພວກຄົນທີ່ມີໃຈບໍ່ສັດຊື່, ແຕ່ຊົງພໍພຣະໄທຄົນທີ່ດຳເນີນຊີວິດແບບບໍ່ມີທີ່ຕິ.
[21]ເປັນສິ່ງທີ່ແນ່ນອນວ່າ ຄົນຊົ່ວຮ້າຍຈະຖືກລົງໂທດ, ແຕ່ປະຊາຊົນທີ່ຊອບທຳຈະໄດ້ຮັບການຊ່ວຍກູ້.[22]ສະຕຣີງາມທີ່ປາສະຈາກການວິເຄາະ
ກໍຄືຫວ່ງທອງຄຳທີ່ດັງຂອງໂຕຫມູ.
[23]ຄວາມປາຖະຫນາຂອງປະຊາຊົນທີ່ຊອບທຳລ້ວນແຕ່ດີ, ແຕ່ປະຊາຊົນອະທຳຫວັງໄດ້ແຕ່ພຽງພຣະພິໂລດເທົ່ານັ້ນ.[24]ມີບາງຄົນທີ່ຫວ່ານແກ່ນພືດ
ເຂົາກໍຫຍິ່ງມີຫລາຍຂຶ້ນ; ຄົນອື່ນທີ່ບໍ່ໄດ້ຫວ່ານ ເຂົາກໍຫຍິ່ງຂັດສົນ.
[25]ບຸກຄົນທີ່ໃຈກວ້າງ ກໍຈະເລີນຮຸ່ງເຮືອງ ຄົນທີ່ໃຫ້ນ້ຳກັບຄົນອື່ນ ກໍໄດ້ນ້ຳຕອບແທນ.[26]ປະຊາຊົນສາບແຊ່ງພວກຄົນທີ່ບໍ່ຂາຍເຂົ້າ,
ແຕ່ພຣະພອນຢູ່ເທິງຫົວຂອງເຂົາ ຜູ້ທີ່ຂາຍເຂົ້າ.
[27]ຄົນທີ່ສະແຫວງຫາຄວາມດີ ກໍເສາະຫາຄວາມຊື່ນຊົມ, ແຕ່ຄົນທີ່ເສາະຫາຄວາມຊົ່ວຮ້າຍກໍຈະໄດ້ເຫັນມັນ.
[28]ຄົນເຫລົ່ານັ້ນທີ່ວາງໃຈໃນຄວາມຮັ່ງມີຈະລົ້ມລະລາຍ, ແຕ່ຄົນຊອບທຳຈະຮຸ່ງເຮືອງຄືໃບໄມ້ຂຽວ.
[29]ຄົນທີ່ເຮັດໃຫ້ຄອບຄົວຂອງຕົນລຳບາກ ຈະຮັບລົມເປັນມໍຣະດົກ ແລະຄົນໂງ່ຈະເປັນຄົນຮັບໃຊ້ຂອງຄົນທີ່ໃຈມີປັນຍາ.
[30]ບຸກຄົນທີ່ຊອບທຳຈະເປັນຄືຕົ້ນໄມ້ແຫ່ງຊີວິດ, ແຕ່ຄວາມຮຸນແຮງກໍທຳຮ້າຍຊີວິດ.[31]ເບິ່ງແມ! ຖ້າບຸກຄົນຊອບທຳໄດ້ຮັບສິ່ງທີ່ເຂົາຄວນໄດ້ຮັບ;
ຄົນອະທຳ ແລະຄົນບາບຈະໄດ້ຮັບຫລາຍຍິ່ງກວ່ານັ້ນຈັກເທົ່າໃດ!

 generated on Tue Jun 17 19:01:42 2025

12 [1]ຄົນໃດຮັກການບອກສອນກໍຮັກຄວາມຮູ້, ແຕ່ຄົນທີ່ຊັງຄຳຕັກເຕືອນກໍເປັນຄົນໂງ່.[2]ພຣະຢາເວຊົງໂປດປານຄົນດີ,
ແຕ່ພຣະອົງຈະຊົງລົງໂທດຄົນທີ່ວາງແຜນຊົ່ວຮ້າຍ.

[3]ບຸກຄົນບໍ່ອາດຈະຕັ້ງຫມັ້ນໄດ້ດ້ວຍຄວາມຊົ່ວ, ແຕ່ປະຊາຊົນຜູ້ຊອບທຳຈະບໍ່ຖືກເຮັດໃຫ້ຫວັ່ນໄຫວ.
[4]ເມຍທີ່ດີປະເສີດເປັນມົງກຸດຂອງຜົວຂອງນາງ, ແຕ່ນາງຜູ້ນຳຄວາມອັບອາຍມາ ກໍຄືຄວາມເນົ່າເປື່ອຍໃນກະດູກຂອງຜົວ.
[5]ແຜ່ນງານຂອງຄົນຊອບທຳນັ້ນຍຸດຕິທຳແຕ່ການຊີ້ແນະຂອງຄົນອາທຳນັ້ນຫລອກລວງ[6]ບັນດາຖ້ອຍຄຳຂອງຄົນອາທຳຫມອບຖ້າສັງຫານຄົນ
ແຕ່ຖ້ອຍຄຳຂອງຄົນທ່ຽງທຳຊ່ອຍຊີວິດພວກເຂົາ
[7]ປະຊາຊົນອະທຳຖືກຄວ່ຳລົງແລະສາບສູນໄປ
ແຕ່ບ້ານຂອງບຸກຄົນຊອບທຳຈະຍັງຄຳລົງຢູ່[8]ບຸກຄົນຈະໄດ້ຄຳຍົກຍ້ອງຕາມຄວາມສະຫລາດຂອງເຂົາ ແຕ່ຄົນທີ່ໃຈຄົດບ້ຽວກໍເປັນທີ່ດູຫມິ່ນ
[9]ການເປັນຄົນທຳມະດາ ແລະທຳມາຫາກິນເອງ
ກໍດີກວ່າການເຮັດທີ່ວ່າໃຫຍ່ໂຕແຕ່ບໍ່ມີອາຫານກິນ[10]ບຸກຄົນທີ່ຊອບທຳໃຫ້ຄວາມສົນໃຈຄວາມຕ້ອງການຂອງສັດລ້ຽງຂອງເຂົາ
ແຕ່ຄວາມສົງສານຂອງຄົນອະທຳຄືຄວາມດຸຮ້າຍ
[11]ຄົນທີ່ເຮັດວຽກໃນທີ່ດິນຂອງເຂົາຈະມີອາຫານບໍລິບູນ
ແຕ່ໃຜກໍຕາມທີ່ໄລ່ຕາມສິ່ງບໍ່ມີຄ່າຍ່ອມບໍ່ມີສາມັນສຳນຶກ[12]ບຸກຄົນອະທຳຢາກໄດ້ສິ່ງທີ່ຄົນຊົ່ວລັກມາຈາກຄົນອື່ນ
ແຕ່ຜົນຂອງຄົນຊອບທຳຈະເກີດຈາກພວກເຂົາເອງ
[13]ບຸກຄົນຊົ່ວຍ່ອມຕິດບ່ວງໂດຍປາກທີ່ຊົ່ວຮ້າຍຂອງເຂົາ
ແຕ່ບຸກຄົນຊອບທຳຫນີພົ້ນຈາກຄວາມລຳບາກ[14]ຈາກຜົນຂອງຄຳເວົ້າທັງຫລາຍຂອງບຸກຄົນຈະອີ່ມໃຈດ້ວຍສິ່ງດີ
ເຊັ່ນດຽວກັນກັບຜົນງານແຫ່ງມືຂອງເຂົາກໍໃຫ້ລາງວັນແກ່ເຂົາ
[15]ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງເຂົາເອງ
ແຕ່ຄົນມີປັນຫາຍອມຟັງຄຳແນະນຳ[16]ຄົນໂງ່ຍ່ອມສະແດງຄວາມຮ້າຍອອກໃຫ້ເຫັນຢ່າງໄວວາ
ແຕ່ຄົນມີປັນຍາບໍ່ສົນໃຈກັບຄຳຄົນຫມິ່ນປະຫມາດ
[17]ຄົນທີ່ເວົ້າຄວາມຈິງກໍໃຫ້ການຢ່າງຊື່ສັດ ແຕ່ຄຳພະຍານເທັດ ກໍໃຫ້ເກີດຄວາມບໍ່ຍຸດຕິທຳ[18]ຄຳເວົ້າທີ່ບໍ່ຄິດ ເຮັດໃຫ້ເຈັບຊ້ຳດັ່ງດາບແທງ
ແຕ່ຄຳເວົ້າທີ່ມີປັນຍາ ປົ່ວແປງໃຫ້ດີໄດ້
[19]ປາກທີ່ເວົ້າຊື່ຢູ່ໄດ້ຍືນຍາວ ແຕ່ປາກທີ່ເວົ້າຕົວະຍືນຢູ່ໄດ້ຊົ່ວຄາວ[20]ຄວາມຫລອກລວງຢູ່ໃນໃຈຂອງຄົນເຫລົ່ານັ້ນທີ່ຄິດເຮັດຊົ່ວ
ແຕ່ຄວາມຍິນດີມາຍັງເຫລົ່າຄົນທີ່ແນະນຳໃຫ້ມີສັນຕິພາບ
[21]ບໍ່ມີສິ່ງຊົ່ວຮ້າຍເກີດຂຶ້ນກັບຄົນຊອບທຳ ແຕ່ຄົນອະທຳເຕັມໄປດ້ວຍຄວາມລຳບາກ[22]ພຣະຢາເວຊົງກຽດຊັງປາກທີ່ເວົ້າຕົວະ
ແຕ່ຄົນເຫລົ່ານັ້ນມີຊີວິດຢູ່ຢ່າງຊື່ສັດເປັນຄວາມປິຕິຍິນດີຂອງພຣະອົງ
[23]ຄົນທີ່ມີປັນຍາເກັບກຳຄວາມຮູ້ຢ່າງງຽບໆສຳລັບຕົນ
ແຕ່ຄວາມອັບປັນຍາມັກສະແດງອອກມາໃຫ້ເຂົາຮູ້[24]ມືຂອງຄົນດຸຫມັ່ນຈະປົກຄອງແຕ່ຄົນກຽດຄ້ານຈະຖືກບັງຄັບໃຫ້ເຮັດວຽກຫນັກ
[25]ຄວາມກັງວົນກະວາຍໃນໃຈເຮັດໃຫ້ເຂົາທໍ້ຖອຍ ແຕ່ຖ້ອຍຄຳທີ່ດີເຮັດໃຫ້ເຂົາຍິນດີ[26]ບຸກຄົນຊອບທຳເປັນຜູ້ແນະນຳໃຫ້ກັບຫມູ່ຂອງເຂົາ
ແຕ່ທາງຂອງຄົນອະທຳນຳໂຕເຂົາໃຫ້ຕໍ່າລົງ
[27]ປະຊາຊົນທີ່ກຽດຄ້ານຈະບໍ່ໄດ້ປີ້ງອາຫານຕາມທີ່ເຂົາຕ້ອງການ
ແຕ່ຄົນຂະຫຍັນຈະໄດ້ຮັບສົມບັດລ້ຳຄ່າ[28]ຄົນເຫລົ່ານັ້ນທີ່ຍ່າງຕາມວິຖີຂອງຄົນຊອບທຳຈະພົບຊີວິດ ແຕ່ຫົນທາງນັ້ນບໍ່ມີຄວາມຕາຍ

 generated on Tue Jun 17 19:01:42 2025

13 [1]ລູກຊາຍທີ່ມີປັນຍາຟັງຄຳສັ່ງສອນຂອງບິດາເຂົາ, ແຕ່ຄົນທີ່ມັກເຢາະເຢີ້ຍບໍ່ຟັງຄຳເວົ້າ.
[2]ບຸກຄົນຍິນດີໃນຂອງດີເຫລົ່ານັ້ນຈາກຜົນທີ່ມາຈາກປາກຂອງເຂົາ, ແຕ່ຄວາມຢາກຂອງຄົນທໍລະຍົດຄືຄວາມໂຫດຮ້າຍ.

[3]ຄົນທີ່ລະວັງຄຳເວົ້າທີ່ເວົ້າອອກຈາກປາກເຂົາແມ່ນຄົນທີ່ຮັກສາຊີວິດຂອງເຂົາ, ແຕ່ຄົນທີ່ເວົ້າຢ່າງບໍ່ຄິດແມ່ນຄົນທີ່ທຳລາຍໂຕເອງ.
[4]ຄວາມຢາກຂອງປະຊາຊົນທີ່ກຽດຄ້ານກໍມີຢູ່, ແຕ່ຈະບໍ່ໄດ້ອີຫຍັງເລີຍ
ແຕ່ຄວາມຢາກຂອງຄົນຂະຫຍັນຈະໄດ້ຮັບການຕອບສະໜອງຢ່າງສຸດໃຈ.
[5]ບຸກຄົນຊອບທຳບໍ່ມັກຄົນເວົ້າຂີ້ຕົວະ, ແຕ່ບຸກຄົນອະທຳປະພຶດໜ້າກຽດຊັງ, ແລະເຂົາເຮັດສິ່ງທີ່ໜ້າອາຍ.
[6]ຄົນຊອບທຳຄຸ້ມຄອງຄົນເຫລົ່ານັ້ນທີ່ທາງຂອງເຂົາຂາດການຕຳນິ, ແຕ່ຄວາມອະທຳຈະທຳລາຍຄົນເຫລົ່ານັ້ນທີ່ເຮັດບາບ.
[7]ມີບາງຄົນທີ່ວ່າໂຕເອງມັ່ງຄັ່ງ, ແຕ່ບໍ່ມີຫຍັງເລີຍ ແລະບາງຄົນທີ່ໃຫ້ຂອງທຸກສິ່ງ, ແຕ່ຍັງມັ່ງຄັ່ງຢ່າງແທ້ຈິງ.
[8]ຄ່າໄຖ່ຊີວິດຂອງຄົນມັ່ງຄັ່ງຄືຄວາມມັ່ງຄັ່ງຂອງເຂົາ, ແຕ່ຄົນຍາກຈົນຈະບໍ່ໄດຍິນຄຳຂົ່ມຂູ່ເອົາຄ່າໄຖ່.
[9]ແສງສະຫວ່າງຂອງຄົນຊອບທຳເປັນດັ່ງໂຄມສ່ອງແຈ້ງ, ແຕ່ຄົນຊົ່ວເປັນຕະກຽງທີ່ກຳລັງຈະມອດ.[10]ຄວາມໂອຫັງມີກໍໃຫ້ເກີດຄວາມເດືອດຮ້ອນ,
ແຕ່ຄົນເຫລົ່ານັ້ນທີ່ຮັບຟັງຄຳແນະນຳນັ້ນຄືປັນຍາ.
[11]ຊັບທີ່ຫາໄດ້ງ່າຍກໍຫາຍໄປໄວ, ແຕ່ຊັບທີ່ຫາດ້ວຍເຫື່ອໄຄກໍສະສົມໄວ້ໄດ້.[12]ເມື່ອຄວາມຫວັງຖືກເລື່ອນອອກໄປ ມັນເຮັດໃຫ້ອ່ອນໃຈ,
ແຕ່ການປາຖະໜາແມ່ນທຳມະຊາດແຫ່ງຊີວິດ.
[13]ຄົນທີ່ດູຫມິ່ນການສັ່ງສອນກໍທຳລາຍຕົນເອງ, ແຕ່ຄົນທີ່ນັບຖືບັນຍັດຈະໄດ້ຮັບບຳເນັດ.[14]ຄຳສອນຂອງບຸກຄົນມີປັນຍາເປັນນ້ຳພຸແຫ່ງຊີວິດ,
ເພື່ອຄົນຫລີກຈາກບ່ວງມໍລະນາໄດ້.
[15]ຄວາມສະຫລາດເຮັດໃຫ້ໄດ້ຮັບຄວາມໂປດປານ, ແຕ່ຫົນທາງຂອງຄົນທໍລະຍົດນັ້ນບໍ່ມີສິ້ນສຸດ.[16]ຄົນທີ່ຢັ້ງຮູ້ຄິດກ່ອນເຮັດ,
ແຕ່ຄົນໂງຈ້າເຜີຍແບຄວາມໂງ່ຈ້າຂອງຕົນໃຫ້ຄົນອື່ນເຫັນ.
[17]ຜູ້ສົ່ງຂ່າວທີ່ໄວ້ໃຈບໍ່ໄດ້ກໍນຳຄວາມເດືອດຮ້ອນມາ,
ແຕ່ວ່າຜູ້ສົ່ງຂ່າວທີ່ເຊື່ອຖືກໍນຳສັນຕິສຸກມາໃຫ້[18]ຄົນທີ່ເສີຍຕໍ່ຄຳສັ່ງສອນຈະມີຄວາມຍາກຈົນ, ແຕ່ກຽດຕິຍົດຈະມາເຖິງຄົນທີ່ສົນໃຈຄຳຕັກເຕືອນ.
[19]ຄວາມປາຖະໜາທີ່ເປັນຈິງນັ້ນຫວານຊື່ນ ແກ່ຜູ້ທີ່ປາຖະໜາ, ແຕ່ຄວາມຫັນຈາກຄວາມຊົ່ວຮ້າຍເປັນສິ່ງທີ່ໜ້າກຽດໜ້າຊັງສຳລັບຄົນໂງ່.
[20]ຍ່າງກັບປະຊາຊົນທີ່ມີປັນຍາ ແລະເຈົ້າຈະກາຍເປັນຄົນທີ່ມີປັນຍາ, ແຕ່ໝູ່ຂອງຄົນໂງ່ຈະຕົກຢູ່ໃນອັນຕະລາຍ.
[21]ສິ່ງຊົ່ວຮ້າຍຕິດຕາມຄົນບາບ, ເຕ່ສິ່ງດີເປັນລາງວັນຂອງຄົນຊອບທຳ.[22]ບຸກຄົນທີ່ດີຍ່ອມຖິ້ມມໍລະດົກໃຫ້ລູກຫລານ,
ແຕ່ຊັບສົມບັດຂອງຄົນບາບນັ້ນຖືກເກັບໄວ້ ໃຫ້ຄົນຊອບທຳ.
[23]ດິນທີ່ບໍ່ຖືກໄຖພວນຂອງຄົນຍາກຈົນຜະລິດອາຫານມາກມາຍ, ແຕ່ມັນຖືກກວາດໄປ ໂດຍຄວາມຍຸດຕິທຳ.[24]ຄົນທີ່ບໍ່ເອົາໄມ້ແສ້ຕີລູກຂອງເຂົາ,
ແຕ່ຄົນທີ່ຮັກລູກຊາຍຂອງເຂົາຍອມໝັ່ນສອນເຂົາ.
[25]ບຸກຄົນຊອບທຳກິນອາຫານພຽງພໍຕາມຄວາມຕ້ອງການ, ແຕ່ທ້ອງຂອງຄົນອະທຳກໍຫິວໂຫຍສະເໝີ.


generated on Tue Jun 17 19:01:42 2025

# 14

[1]ຜູ້ຍິງທີ່ມີປັນຍາສ້າງບ້ານຂອງນາງຂຶ້ນ, ແຕ່ຜູ້ຍິງທີ່ໂງ່ຣື້ບ້ານຂອງຕົນລົງດ້ວຍມືຂອງນາງເອງ.
[2]ຄົນທີ່ດຳເນີນຊີວິດຢ່າງທ່ຽງທຳຍ່ອມຢຳເກງພຣະຢາເວ, ແຕ່ຄົນທີ່ທາງຂອງເຂົາຄົດກໍດູຫມິ່ນພຣະອົງ.

[3]ໃນປາກຂອງຄົນໂງ່ມີໄມ້ແສ້ງຈະລົງໂທດຄວາມຍິ່ງຂອງເຂົາ, ແຕ່ຣິມສົບຂອງຄົນມີປັນຍາຈະປົກປ້ອງພວກເຂົາໄວ້.
[4]ທີ່ໃດມີການໃຫ້ອາຫານຝູງງົວ ທົ່ງຫຍ້າກໍຫວ່າງເປົ່າ, ແຕ່ພືດຜົນຫລວງຫລາຍໄດ້ມາດ້ວຍກຳລັງຂອງງົວ.
[5]ພະຍານທີ່ຊື່ສັດບໍ່ຕົວະ, ແຕ່ພະຍານທີ່ເຊື່ອຖືບໍ່ໄດ້ຫາຍໃຈອອກມາເປັນຄຳຕົວະ.[6]ຄົນທີ່ເວົ້າເຢາະເຢີ້ຍສະແຫວງປັນຍາບໍ່ພົບ,
ແຕ່ຄວາມຮູ້ກໍງ່າຍສຳລັບຄວາມເຂົ້າໃຈ.
[7]ຈົ່ງຢ່າງອອກຈາກຄົນທີ່ໂງ່, ເພາະເຈົ້າຈະບໍ່ພົບຄວາມຮູ້ຈາກປາກຂອງເຂົາ.
[8]ປັນຍາຂອງບຸກຄົນທີ່ສະຫລາດຮອບຄອບແມ່ນເຂົ້າທາງເດີນຂອງຕົນເອງ, ແຕ່ຄວາມໂງ່ຂອງຄົນໂງ່ຄືການຫລອກລວງ.
[9]ຄົນໂງ່ເຢາະເຢີ້ຍເມື່ອຖວາຍເຄື່ອງບູຊາຊົດໃຊ້ບາບ, ແຕ່ຄົນທ່ຽງທຳເປັນທີ່ໂປດປານ.[10]ຈິດໃຈຮູ້ຄວາມຂົມຂື່ນຂອງໃຈເອງ
ແລະບໍ່ມີຄົນແປກຫນ້າມາເຂົ້າສ່ວນຄວາມຊື່ນບານຂອງມັນ.
[11]ບ້ານຂອງຄົນອະທຳຈະຖືກທຳລາຍ, ແຕ່ເຕັນຂອງປະຊາຊົນທີ່ທ່ຽງທຳຈະຮຸ່ງເຮືອງ.[12]ມີທາງຫນຶ່ງທີ່ຄົນເຮົາຄິດວ່າຖືກ,
ແຕ່ປາຍທາງນຳສູ່ຄວາມຕາຍເທົ່ານັ້ນ.
[13]ໃຈອາດຈະຫົວແຕ່ຍັງເສົ້າຫມອງ, ແຕ່ຄວາມຍິນດີກໍອາດມີປາຍທາງທີ່ເປັນຄວາມໂສກເສົ້າ.
[14]ຄົນບໍ່ມີຄວາມສັດຊື່ຈະໄດ້ຜົນຕອບແທນຈາກທາງຂອງເຂົາຢ່າງສາສົມ, ແຕ່ຄົນທີ່ດີກໍຈະໄດ້ຜົນຕອບແທນຈາກການກະທຳຂອງເຂົາ.
[15]ຄົນຮູ້ນ້ອຍເຊື່ອທຸກຢ່າງ, ແຕ່ຄົນມີປັນຍາຄິດກ່ອນກ້າວອອກໄປ, ແຕ່ຄົນໂງ່ຈ້າເຊື່ອທຸກສິ່ງທີ່ຕົນໄດ້ຍິນ.
[16]ຄົນມີປັນຍາຍ່ອມເກງຢ້ານແລະຫນີຈາກສິ່ງຊົ່ວຮ້າຍ, ແຕ່ຄົນໂງ່ຈ້າຂາດຄວາມຢັບຢັ້ງຈຶ່ງລົງມືເຮັດໄປຢ່າງວ່ອງໄວ.
[17]ຄົນໂງ່ຂ້າມຢ່າງການເຕືອນຢ່າງຫມັ້ນໃຈ ຄົນທີ່ຢາກຮ້າຍໄວເຮັດສິ່ງທີ່ໂງ່, ແລະບຸກຄົນທີ່ເຈົ້າເລ້ເປັນສິ່ງທີ່ກຽດຊັງ.
[18]ຄົນທີ່ຮູ້ນ້ອຍໄດ້ຄວາມໂງ່ເປັນມໍລະດົກ, ແຕ່ປະຊາຊົນທີ່ຫລັກແຫລມໄດ້ຄວາມຮູ້ເປັນລາງວັນ.
[19]ປະຊາຊົນທີ່ຊົ່ວຈະກາບຄົນເລົ່ານັ້ນທີ່ດີ ແລະເຫລົ່າຄົນອະທຳຈະກາບທີ່ປະຕູບ້ານຂອງຄົນຊອບທຳ.
[20]ບຸກຄົນຍາກຈົນນັ້ນແມ່ນເພື່ອນບ້ານຂອງຕົນຈະລັງກຽດ, ແຕ່ປະາຊົນທີ່ມີມັ່ງຄັ່ງກໍມີສະຫາຍຢ່າງມາກມາຍ.
[21]ຄົນທີ່ດູຫມິ່ນເພື່ອນບ້ານຂອງຕົນກໍເປັນຄົນບາບ, ແຕ່ຄົນທີ່ສະເດງຄວາມເມດຕາຄົນຍາກຈົນກໍເປັນພຣະພອນ.[22]ຄົນທີ່ເຮັດການຊົ່ວນັ້ນບໍ່ຜິດບໍ່?,
ແຕ່ຄົນທີ່ຄິດການດີກໍພົບຄວາມຈົງຮັກພັກດີ ແລະຄວາມຊື່ສັດ.
[23]ງານທີ່ເມື່ອຍຍາກທຸກຢ່າງກໍມີກຳໄລ, ແຕ່ພຽງການເວົ້າເທົ່ານັ້ນ
ກໍນຳໄປສູ່ຄວາມຍາກຈົນ[24]ມົງກຸດຂອງປະຊາຊົນທີ່ມີປັນຍາຄືຄວາມມັ່ງຄັ່ງຂອງພວກເຂົາ,
ແຕ່ຄວາມໂງ່ຂອງຄົນໂງ່ນັ້ນນຳມາຊຶ່ງຄວາມໂງ່ຂອງພວກເຂົາຫລາຍຂຶ້ນເທົ່ານັ້ນ.
[25]ພະຍານທີ່ເວົ້າຄວາມຈິງຊ່ວຍຊີວິດມາກມາຍ, ແຕ່ພະຍານທີ່ເວົ້າບໍ່ມີສິນທຳຫາຍໃຈອອກມາເປັນການຕົວະ.
[26]ຜູ້ທີ່ຢຳເກງພະຢາເວ, ເຂົາກໍມີຄວາມຫມັ້ນໃຈໃນໂຕເອງ; ສິ່ງເຫລົ່ານີ້ຈະເປັນເຫມືອນສະຖານທີ່ຫມັ້ນຄົງທີ່ຈະຄຸ້ມກັນລູກຫລານຂອງເຂົາ.
[27]ຄວາມຢຳເກງພຣະຢາເວເປັນນ້ຳພຸແຫ່ງຊີວິດ, ເພື່ອໃຫ້ບຸກຄົນຫລີກຈາກບ່ວງແຫ່ງຄວາມຕາຍໄດ້.
[28]ຫາກບໍ່ມີປະຊາຊົນເຈົ້ານາຍກໍຕາຍ.[29]ບຸກຄົນທີ່ມີຄວາມອົດທົນກໍມີຄວາມເຂົ້າໃຈຫລາຍ, ແຕ່ບຸກຄົນທີ່ໃຈຮ້າຍໄວກໍຍົກຍ່ອງຄວາມໂງ່.
[30]ຈດີໃຈສະຫງົບໃຫ້ຊີວິດແກ່ເນື້ອຫນັງ, ແຕ່ຄວາມອິດສາເຮັດໃຫ້ກະດູກຜູ.[31]ຜູ້ກົດຂີ່ຄົນຍາກຈົນກໍສາບແຊ່ງພຣະຜູ້ສ້າງຂອງເຂົາ,
ເຕ່ຜູ້ເມດຕາຄົນຂັດສົນກໍຖວາຍກຽດແດ່ພຣະອົງ.
[32]ຄົນອະທຳຖືກລາຍຕາມກຳຊົ່ວຂອງເຂົາ, ແຕ່ຄົນຊອບທຳມີທີ່ລີ້ໄພແມ່ນແຕ່ໃນຄວາມຕາຍ.[33]ປັນຍາທີ່ອາໄສຢູ່ໃນໃຈຂອງຄົນທີ່ມີຄວາມເຂົ້າໃຈ,
ແຕ່ໃນທ່າມກາງຄົນໂງ່ສາມາດເຮັດໃຫ້ຕົວເອງເປັນທີ່ຮູ້ຈັກ.
[34]ຄວາມຊອບທຳຢ່າງເຊີດຊູປະເທດຊາດ, ແຕ່ບາບເປັນສິ່ງທີ່ຫນ້າອາຍຫລາຍ ແກ່ປະຊາຊົນ.
[35]ຄວາມໂປດປານຂອງກະສັດຢູ່ທີ່ຂ້າຣາຊການທີ່ເຮັດການຢ່າງຮອບຄອບ, ແຕ່ພະພິໂຣດຂອງພະອົງກໍຕົກແກ່ຜູ້ທີ່ປະພຶດຢ່າງຫນ້າອັບອາຍ.

 generated on Tue Jun 17 19:01:42 2025

15 [1]ຄຳຕອບນຸ້ມນວນຊ່ວຍຢຸດຢັ້ງຄວາມໂກດກ້ຽວ, ແຕ່ຄຳເວົ້າຫຍາບຊ້າຍົ່ວະໃຫ້ໂມໂຫ.[2]ລີ້ນຂອງປະຊາຊົນມີປັນຍາຍົກຍ່ອງຄວາມຮູ້,
ແຕ່ປາກຂອງຄົນໂງ່ຍ່ອມເວົ້າແຕ່ຄວາມໂງ່ອອກມາ.

[3]ທຸກເຫດການທີ່ເກີດຂຶ້ນພຣະຢາເວຊົງຮູ້ເຫັນ, ພຣະອົງເປັນຜູ້ເຝົ້າເບິ່ງຄົນດີແລະຄົນຊົ່ວ.[4]ລີ້ນທີ່ຮັກສາເປັນຕົ້ນໄມ້ແຫ່ງຊີວິດ,
ແຕ່ລີ້ນເວົ້າຈາທີ່ຫຍາບຄາຍເຮັດໃຫ້ຈິດໃຈແຕກສະຫລາຍ.
[5]ຄົນໂງ່ດູຫມິ່ນຄຳສັ່ງສອນຂອງບິດາຂອງເຂົາ, ແຕ່ຄົນຮຽນຮູ້ຈາກຄຳຕັກເຕືອນເປັນຄົນທີ່ສະຫລາດ.[6]ໃນບ້ານຂອງຄົນຊອບທຳມີ
ສົມບັດມາກມາຍ, ແຕ່ສິ່ງທີ່ຄົນອະທຳຫາມາໄດ້ນັ້ນນຳຄວາມລຳບາກມາໃຫ້ເຂົາ.
[7]ສົບປາກຂອງຄົນມີປັນຍາກະຈາຍຄວາມຮູ້, ແຕ່ຄົນໂງ່ຈ້າບໍ່ເປັນເຊັ່ນນັ້ນ.[8]ພຣະຢາເວຊົງກຽດຊັງເຄື່ອງບູຊາຂອງຄົນອະທຳ,
ແຕ່ຊົງປິຕິຍິນດີກັບຄຳອະທິຖານຂອງຄົນທ່ຽງທຳ.
[9]ພຣະຢາເວກຽດຊັງທາງຂອງຄົນອະທຳ, ແຕ່ພຣະອົງຊົງຮັກຜູ້ຕິດຕາມຄົນຊອບທຳ.[10]ມີການຕີສອນຢ່າງຫນັກສຳລັບຜູ້ໃດກໍຕາມທີ່ຖິ້ມທາງດີ
ແລະຄົນທີ່ກຽດຄຳຕັກເຕືອນກໍຈະຕາຍ.
[11]ແດນຄົນຕາຍ ແລະແດນພິນາດປະກົດແຈ້ງຕໍ່ພຣະພັກພຣະຢາເວ, ແລ້ວໃຈຂອງເຫລົ່າລູກຊາຍຂອງມະນຸດຍິ່ງກວ່ານັ້ນຫລາຍຊ່ຳໃດ?.
[12]ຄົນທີ່ມັກເຢາະເຍີ້ຍຄົນອື່ນບໍ່ມັກການຕັກເຕືອນ, ເຂົາຈະບໍ່ໄປຫາຄົນມີປັນຍາ.
[13]ໃຈຍິນດີເຮັດໃຫ້ຈິດໃຈຊື່ນບານ, ແຕ່ໃຈທີ່ເປັນທຸກເຮັດໃຫ້ຈິດໃຈສະຫລາຍ.[14]ໃຈຂອງຄົນທີ່ມີຄວາມເຂົ້າໃຈກັນກໍສະແຫວງຫາຄວາມຮູ້,
ແຕ່ປາກຂອງຄົນໂງ່ກໍປ້ອນດ້ວຍຄວາມໂງ່.
[15]ວັນທັງສິ້ນຂອງປະຊາຊົນທີ່ຖືກຂົ່ມເຫັງກໍໂຫດຮ້າຍ, ແຕ່ໃຈລ້າເລີງມີງານລ້ຽງທີ່ບໍ່ເລີກລາ.[16]ມີຊັບນ້ອຍແຕ່ມີຄວາມຢຳເກງພຣະຢາເວ
ກໍມີຊັບມາກ, ແຕ່ມີຄວາມວິຕົກກັງວົນຢູ່ດ້ວຍ.
[17]ກິນຜັກເປັນອາຫານໃນສິ່ງທີ່ມີຄວາມຮັກ ກໍດີກວ່າຊີ້ນງົວອ້ວນໂດຍມີການກຽດຊັງຢູ່ດ້ວຍ.[18]ຄົນໂມໂຫຮ້າຍກໍໃຫ້ເກີດການວິວາດ,
ແຕ່ຄົນທີ່ໂກດຊ້າກໍລະງັບການໂຕ້ຖຽງກັນ.
[19]ທາງຂອງຄົນກຽດຄ້ານເຫມືອນກັບທີ່ ທີ່ເຕັມໄປດ້ວຍຄວາມວິດພົ້ນຄວາມເດືອດຮ້ອນ, ແຕ່ວິຖີຂອງຄົນທ່ຽງທຳເປັນທາງລຽບ.
[20]ລູກຊາຍທີ່ມີປັນຍານຳຄວາມຍິນດີມາສູ່ພໍ່ຂອງຕົນ, ແຕ່ບຸກຄົນທີ່ໂງ່ດູຫມິ່ນປະຫມາດມານດາຂອງຕົນ.
[21]ຄວາມໂງ່ເປັນຄວາມຍິນດີແກ່ບຸກຄົນທີ່ຂາດຄວາມສຳນຶກ, ແຕ່ຄົນທີ່ມີຄວາມເຂົ້າໃຈ ຈະດຳເນີນໃນທາງຊື່ຕົງ.
[22]ແຜນງານທີ່ປາສະຈາກການປຶກສາຫາລືກໍຫລົ້ມເຫລວ, ແຕ່ເມື່ອມີຜູ້ແນະນຳຈຳນວນຫລາຍແຜນງານນັ້ນກໍສຳເລັດ.
[23]ບຸກຄົນຈະພົບຄວາມຍິນດີເມື່ອເຂົາມີຄຳຕອບທີ່ຕົງກັບປັນຍາ, ຄຳດຽວທີ່ມາຈາກເວລານັ້ນຊ່າງວິເສດແທ້![24]ວິຖີນຳຄົນສະຫລາດຂຶ້ນເບື້ອງເທິງ,
ເພື່ອເຂົາຈະໄດ້ຫລີກຫນີຈາກແດນຄົນຕາຍເບື້ອງລຸ່ມ.
[25]ພຣະຢາເວຊົງຮື້ຖອນບ້ານຂອງຄົນອວດດີ, ແຕ່ປົກປ້ອງຊັບສິນຂອງແມ່ຫມ້າຍ.[26]ພຣະຢາເວຊົງກຽດຊັງຄວາມຄິດຂອງປະຊາຊົນທີ່ຊົ່ວຮ້າຍ,
ແຕ່ຄຳຊົມຊື່ນນັ້ນບໍລິສຸດ.
[27]ວິສາຊົບກໍເຮັດໃຫ້ຄອບຄົວຂອງເຂົາລຳບາກ, ແຕ່ຄົນທີ່ກຽດສິນບົນຈະມີຊີວິດຢູ່.[28]ໃຈຂອງບຸກຄົນຊອບທຳ ໄຕ່ຕອງກ່ອນວ່າຈະຕອບແນວໃດ,
ແຕ່ປາກຂອງຄົນອະທຳແມ່ນເທສິ່ງຊົ່ວຮ້າຍອອກມາ.
[29]ພຣະຢາເວຊົງຢູ່ຫ່າງໄກປະຊາຊົນອະທຳ, ແຕ່ພຣະອົງຊົງໄດ້ຍິນຄຳອະທິຖານຂອງຄົນຊອບທຳ.
[30]ຫນ້າຕາຍິ້ມແຍ້ມເຮັດໃຫ້ມີຄວາມສຸກແລະຂ່າວດີເຮັດໃຫ້ສະບາຍຂຶ້ນ.
[31]ຖ້າເຈົ້າໃຫ້ຄວາມສົນໃຈໃນຄຳຕັກເຕືອນໃຫ້ດຳເນີນຊີວິດ, ເຈົ້າກໍຈະຢູ່ທ່າມກາງບຸກຄົນທີ່ມີປັນຍາ.
[32]ຜູ້ທີ່ບໍ່ຍອມຮັບການແອບສອນກໍເຮັດໃຫ້ຕົນເຈັບປວດ, ແຕ່ຜູ້ທີ່ຍອມຮັບການແອບສອນກໍຊ່ວຍຕົນໃຫ້ເປັນຄົນສະຫລາດຂຶ້ນ.
[33]ການຢຳເກງພຣະຢາເວເປັນການຮຽນຮູ້ໃນຕົວເກີດປັນຍາ ແລະຄວາມຖ່ອມຕົວມາກ່ອນກຽດຕິຍົດ.

 generated on Tue Jun 17 19:01:42 2025

16 1 ແຜນງານຕ່າງໆ ຂອງຈິດໃຈເປັນຂອງບຸກຄົນ, ແຕ່ພຣະຢາເວປະທານຄໍາຕອບຈາກພະໂອດຂອງພະອົງ.
2 ທາງທຸກສາຍຂອງບຸກຄົນກໍບໍລິສຸດໃນສາຍຕາຂອງເຂົາເອງ, ແຕ່ພຣະຢາເວຊົງກວາດເບິ່ງຈິດໃຈທັງຫລາຍ.

3 ຈົ່ງມອບງານຂອງເຈົ້າໄວ້ກັບພຣະຢາເວແລ້ວແຜນງານຂອງເຈົ້າຈະສໍາເລັດ. 4 ພຣະຢາເວຊົງເຮັດໃຫ້ທຸກສິ່ງມີເປົ້າຫມາຍຂອງມັນ,
ແມ່ນຄົນອະທໍາກໍເພື່ອວັນແຫ່ງຄວາມລໍາບາກ.
5 ພຣະຢາເວຊົງກຽດຊັງທຸກຄົນທີ່ມີໃຈຫຍາບຊ້າຈອງຫອງ, ແຕ່ທີ່ແນ່ນອນພວກເຂົາຈະຫນີການລົງໂທດໄປບໍ່ໄດ້.
6 ໂດຍຄວາມຈົງຮັກພັກດີແລະຄວາມສັດຊື່ ຄວາມບາບຊົ່ວກໍຖືກລົບລ້າງໄປ ແລະໂດຍຄວາມຢໍາເກງພຣະຢາເວ
ປະຊາຊົນຫັນຈາກຄວາມຊົ່ວຮ້າຍໄດ້.
7 ເມື່ອທາງຂອງມະນຸດເປັນທີ່ໂປດປານແກ່ພຣະຢາເວ, ພະອົງຊົງເຮັດໃຫ້ພວກສັດຕູນັ້ນຄືນດີກັບພວກສັດຕູຂອງບຸກຄົນນັ້ນຄືນດີກັບເຂົາໄດ້.
8 ມີລາຍໄດ້ພຽງເລັກນ້ອຍພ້ອມກັບມີຄວາມຊອບທໍາ, ກໍດີກວ່າມີລາຍໄດ້ຫລາຍກວ່າຄວາມຍຸດຕິທໍາ.
9 ບຸກຄົນວາງແຜນງານໃນໃຈຂອງເຂົາ, ແຕ່ພຣະຢາເວຊົງນໍາງບາດຕີນຂອງເຂົາ. 10 ຄໍາຕັດສິນທີ່ສະຫລາດຢູ່ທີ່ປາກຂອງກະສັດ,
ພະໂອດຂອງພຣະອົງຊື່ຕົງໃນການພິພາກສາ.
11 ຕາຊັ່ງທັງຫລາຍທີ່ທ່ຽງຕົງມາຈາກພຣະຢາເວ; ຕຸ້ມນ້ໍາຫນັກທັງຫມົດໃນຖົງເປັນພາລະກິດຂອງພະອົງ.
12 ເມື່ອບັນດາກະສັດຊົງເຮັດສິ່ງທີ່ຊົ່ວນັ້ນເປັນສິ່ງທີ່ຕ້ອງໄດ້ຮັບການຕໍານິ, ເພາະວ່າຣາຊາບັນລັງໄດ້ຮັບການສະຖາປານາໄວ້ດ້ວຍຄວາມຊອບທໍາ.
13 ພຣະເຈົ້າຊົງໂປດປານຣິມສົບທີ່ກ່າວອອກມາຈາກປາກມີຄວາມຊອບທໍາ ແລະພຣະອົງຊົງຮັກຜູ້ທີ່ເວົ້າຕົງໄປຕົງມາ.
14 ພະພິໂຣດຂອງກະສັດເປັນທູດແຫ່ງຄວາມຕາຍ, ແຕ່ຄົນທີ່ມີປັນຍາຈະລະງັບພະພິໂຣດນັ້ນ.
15 ໃນຄວາມສະຫງ່າແຫ່ງພະພັກຂອງກະສັດຄືຊີວິດແລະຄວາມໂປດປານຂອງພະອົງຄືເມກທີ່ນໍາຝົນຕົ້ນລະດູມາໃຫ້.
16 ໄດ້ປັນຍາທີ່ດີກວ່າໄດ້ທອງຄໍາສັກເທົ່າໃດ. ແລະໄດ້ຄວາມຮູ້ກໍຫນ້າຈະດີກວ່າໄດ້ເງິນ.
17 ທາງຫລວງຂອງປະຊາຊົນທີ່ທ່ຽງທໍາຫລີກຫນີອອກຈາກຄວາມຊົ່ວຮ້າຍ; ທີ່ຄົນຮັກສາຊີວິດຂອງເຂົາ ກໍລະແວດລະວັງທາງຂອງເຂົາ.
18 ຄວາມຈອງຫອງມາກ່ອນການຖືກທໍາລາຍ ແລະຄວາມເວົ້າຫຍາບຊ້າກໍນໍາໄປສູ່ການຫລົ້ມຈົມ.
19 ເປັນຄົນຖ່ອມໂຕຢູ່ກັບປະຊາຊົນທີ່ຍາກຈົນ ກໍດີກວ່າເປັນຫຸ້ນສ່ວນໃນສິ່ງຂອງ ຂອງຄົນອວດດີປຸ້ນມາ.
20 ຜູ້ໃສ່ໃຈໃນສິ່ງທີ່ພວກເຂົາໄດ້ຮັບການສອນ ກໍຈະພົບແຕ່ສິ່ງທີ່ດີ, ການທີ່ວາງໃຈໃນພຣະຢາເວຈະໄດ້ຮັບການອວຍພອນ.
21 ຄົນມີປັນຍາເອີ້ນໄດ້ວ່າເປັນຄົນມີຄວາມເຂົ້າໃຈແລະວາຈາອ່ອນຫວານເພີ່ມພະລັງໃນການສອນ.
22 ປັນຍາເປັນນ້ໍາພຸແຫ່ງຊີວິດແກ່ຜູ້ເປັນເຈົ້າຂອງ, ແຕ່ການສັ່ງສອນຂອງຄົນໂງ່ເປັນຄວາມໂງ່ຂອງພວກເຂົາ.
23 ໃນໃຈຂອງຄົນມີປັນຍາເຮັດໃຫ້ວາຈາຂອງເຂົາຫວານຊື່ນ ແລະ ເພີ່ມອໍານາດການສັ່ງສອນແກ່ປາກຂອງເຂົາ.
24 ຖ້ອຍຄໍາຊື່ນຊົມເປັນເຫມືອນຮັງເຜິ້ງ ເປັນຄວາມຫວານແກ່ຈິດວິນຍານ ແລະເປັນການປຽວປາລະຫວ່າງກະດູກ.
25 ມີທາງຫນຶ່ງຊຶ່ງເຮົາຄິດວ່າຖືກ, ແຕ່ປາຍທາງຄືຄວາມຕາຍ 26 ຄວາມຫິວຂອງພະນັກງານເຮັດໃຫ້ເຂົາດຸຫມັ່ນເພາະຄວາມຕ້ອງການ,
ການຕອບສະຫນອງຄວາມຫິວນັ້ນ.
27 ຄົນຊົ່ວຮ້າຍແຈກຢາຍແນວບໍ່ດີ ລີ້ນລາວເປັນໄຟດັ່ງທີ່ລຸກໄຫມ້ ດ້ວຍຄໍາເວົ້າອັນຊົ່ວຊ້າ. 28 ຄົນເລ່ລ່ຽມກໍໃຫ້ເກີດອາການຜິດຖຽງກັນ
ຄົນມັກເວົ້າຂວັນນິນທາທໍາລາຍມິດຕະພາບ.
29 ຄົນທີ່ມັກໃຊ້ຄວາມຮຸນແຮງຫລອກລວງຫມູ່ເພື່ອນ ແລະນໍາເຂົາເຂົ້າສູ່ຄວາມຈິບ ຫາຍ. 30 ບຸກຄົນທີ່ຂະຍິບຕາຍິ້ມແຍ້ມ, ໃຫ້ຄອຍລະວັງເອົາ
ໃນໃຈເຂົາຄິດຮ້າຍຫມາຍແຕ່ທໍາລາຍຄົນ.
31 ຊີວິດຄົນຍືນຫມັ້ນເປັນບໍາເນັດ; ຂອງຄົນຊອບທໍາ ແລະເປັນມົງກຸດອັນສະຫງ່າລາສີ. 32 ບຸກຄົນທີ່ອົດທົນດີກວ່າມີອໍານາດ
ຄວບຄຸມຕົນເອງໄດ້ກໍດີກວ່າຄວບຄຸມເມືອງທັງຫມົດ.
33 ມະນຸດໃຊ້ສະຫລາກຢ່າກຮູ້ຈຸດປະສົງ, ແຕ່ແມ່ນພຣະຢາເວເອງທີ່ໃຫ້ຄໍາຊີ້ຂາດ.

 generated on Tue Jun 17 19:01:42 2025

17 1ກິນເຂົ້າແຫ້ງຢ່າງສະຫງົບສຸກ ໃນບ້ານກໍດີກວ່າກິນລ້ຽງ ໃນງານທີ່ມີຄວາມວຸ້ນວາຍ. 2ຄົນຮັບໃຊ້ທີ່ສະຫລາດຈະປົກຄອງລູກຊາຍ
ຜູ້ກໍ່ເລື່ອງຫນ້າອັບອາຍ ແລະຈະໄດ້ສ່ວນແບ່ງມໍລະດົກຄືເປັນຄົນຫນຶ່ງໃນຫມູ່ພີ່ນ້ອງ.

3ເງິນຄຳຖືກທົດລອງດ້ວຍໄຟສັນໃດ, ແຕ່ໃຈມະນຸດກໍຈະຖືກພຣະຢາເວລອງຢູ່ສັນນັ້ນ. 4ຄົນຊົ່ວທີ່ມັກຟັງສິ່ງທີ່ຊົ່ວໆ,
ແລະຄົນຂີ້ຕົວະກໍມັກຟັງເລື່ອງທີ່ຕົວະຕົ້ມ.
5ຜູ້ໃດກໍຕາມທີ່ຫຍຽບຫຍາມຄົນຍາກຈົນ ກໍດູຖູກພຣະຜູ້ສ້າງຂອງເຂົາ ແລະຜູ້ທີ່ຍິນດີເມື່ອເກີດໄພພິບັດແກ່ຄົນອື່ນຈະຖືກລົງໂທດກໍບໍ່ມີ.
6ບັນດາຫລານທັງຫລາຍເປັນມົງກຸດຂອງຜູ້ສູງໄວ ແລະບິດາມານດາສັກສີມາສູ່ລູກຫລານຂອງພວກເຂົາ
7ຄົນທີ່ຫນ້ານັບຖືເວົ້າຕົວະບໍ່ໄດ້ສັນໃດ; ຄົນໂງ່ຈ້າກໍເວົ້າບໍ່ເປັນຕາຟັງສັນນັ້ນ. 8ສິນບົນຄືແກ້ວວິເສດໃນສາຍຕາຂອງຜູ້ໃຫ້,
ບໍ່ວ່າເຂົາຈະໄປທາງໃດກໍປະສົບຄວາມສຳເລັດ.
9ຜູ້ໃຫ້ອະໄພການລະເມີດກໍມຸ່ງຈະສ້າງມິດຕະພາບ, ແຕ່ຄົນທີ່ເວົ້າຢ້ຳຄວາມຜິດຈະເຮັດໃຫ້ຫມູ່ສະນິດແຍກຈາກກັນ.
10ຄຳວ່າກ່າວຄັ້ງດຽວຈະຊຶມເລິກເຂົ້າໄປສຳລັບຄົນທີ່ເຂົ້າໃຈ ຫລາຍກວ່າຄົນຕີຄົນໂງ່ລ້ອຍເທື່ອ.
11ຄົນຊົ່ວຮ້າຍສະແຫວງຫາແຕ່ຄວາມຈິບຫາຍ, ດັ່ງນັ້ນຜູ້ສື່ສານດຸຮ້າຍຈະຖືກສົ່ງໄປສູ້ເຂົາ 12ໃຫ້ຄົນໄປພົບແມ່ຫມີທີ່ລູກຖືກລັກໄປ
ຍັງດີກວ່າພົບຄົນໂງ່ໃນຄວາມໂງ່ຂອງເຂົາ.
13ຄົນທີ່ເຮັດຄວາມຊົ່ວຕອບແທນຄວາມດີ, ຄວາມຊົ່ວຈະບໍ່ພາກຈາກບ້ານຂອງຄົນນັ້ນ. 14ການຜິດຖຽງກັນກໍຊ່ຳເຄື່ອນເລີ່ມແຕກ,
ຄວນຍຸດຕິເລື່ອງລາວກ່ອນເກີດການຜິດຖຽງກັນ.
15ບຸກຄົນທີ່ເຮັດໃຫ້ຄົນອະທຳພົ້ນຄວາມຜິດ ແລະບຸກຄົນທີ່ລົງໂທດຄວາມຊອບທຳທັງສອງກໍເປັນທີ່ກຽດຊັງຕໍ່ພຣະຢາເວ.
16ເປັນຫຍັງຄົນໂງ່ຈຶ່ງຈ່າຍເງິນເພື່ອຊື້ປັນຍາ, ໃນເມື່ອເຂົາບໍ່ມີຄວາມສາມາດທີ່ຈະຮຽນຮູ້?.
17ມິດສະຫາຍຍ່ອມຮັກກັນທຸກເວລາ ແລະພີ່ນ້ອງເກີດມາເພື່ອຊ່ວຍກັນຍາມທຸກຍາກ. 18ຄົນທີ່ບໍ່ມີຄວາມຄິດຍ່ອມໃຫ້ຄຳປະຕິຍານ
ແລະເປັນຜູ້ຄ້ຳປະກັນເພື່ອນບ້ານຂອງຕົນ.
19ຜູ້ໃດກໍຕາມທີ່ຮັກການຂັດແຍ່ງກໍຮັກຄວາມບາບ, ຄົນຂີ້ສະຫາວກໍນຳໄປຫາຄວາມພິນາດ. 20ບຸກຄົນທີ່ໃຈຄົດຈະບໍ່ພົບສິ່ງດີເລີຍ;
ແລະບຸກຄົນທີ່ມີລີ້ນຕະຫລົບຕະແລງຍ່ອມຕົກຢູ່ໃນຄວາມຍາກລຳບາກ.
21ຜູ້ໃດກໍຕາມທີ່ເປັນບິດາມານດາຂອງຄົນໂງ່ຍ່ອມທຸກໂສກ; ແລະບິດາຂອງຄົນໂງ່ກໍບໍ່ມີຄວາມຊື່ນບານ. 22ໃຈລ່າເລີງເປັນຢາຢ່າງດີ,
ແຕ່ຈິດໃຈຊອກຊ້ຳເຮັດໃຫ້ກະດູກແຫ້ງ.
23ຄົນອະທຳຮັບສິນບົນເປັນການລັບ ເພື່ອບິດເບືອນວິຖີແຫ່ງຄວາມຍຸດຕິທຳ. 24ຄົນທີ່ມີຄວາມເຂົ້າໃຈຍ່ອມຈັບຈ້ອງເບິ່ງບັນຫາ,
ແຕ່ຕາຂອງຄົນໂງ່ຢູ່ທີ່ສຸດປາຍຂອງແຜ່ນດິນໂລກ.
25ລູກຊາຍທີ່ໂງ່ເປັນຄວາມໂສກສະຫລົດໃຈແກ່ພໍ່ຂອງເຂົາ ແລະເປັນຄວາມຂົມຂື່ນແກ່ແມ່ທີ່ກຳເນີດຂອງເຂົາ. 26ການລົງໂທດ; ຄົນຊອບທຳກໍບໍ່ດີ
ການຕີພວກຂ້າຣາຊການເພາະຄວາມຊື່ຕົງກໍຜິດ.
27ບຸກຄົນທີ່ມີຄວາມຮູ້ກໍຢັບຢັ້ງຖ້ອຍຄຳຂອງເຂົາ ແລະບຸກຄົນທີ່ມີຈິດໃຈເຢືອກເຢັນເປັນຄົນທີ່ມີຄວາມເຂົ້າໃຈ.
28ແມ່ນຄົນໂງ່ຫາກເສີຍກໍນັບວ່າມີປັນຍາ; ເມື່ອເຂົາປິດປາກຂອງເຂົາກໍມີພິກໄຫວ.


generated on Tue Jun 17 19:01:42 2025

18 [1]ຄົນທີ່ພິກໂຕເອງອອກໄປ ກໍສະແຫວງຫາສິ່ງທີ່ເຂົາປາຖະໜາ ແລ້ວເຂົາມີຄວາມຂັດແຍ້ງກັບຄວາມພິຈາລະນາທຸກຢ່າງ.
[2]ຄົນໂງ່ບໍ່ເພີດເພີນໃນຄວາມເຂົ້າໃຈ, ແຕ່ເພີດເພີນໃນການສະແດງຄວາມຄິດເຫັນຂອງເຂົາເທົ່ານັ້ນ.

[3]ເມື່ອຄົນອະທຳມາເຖິງ, ຄວາມມຶນປະໝາດກໍມາດ້ວຍ ແລະມາດ້ວຍຄວາມອັບປະຍົດແລະຄວາມອົດສູ.
[4]ຖ້ອຍຄຳທັງຫລາຍໃນປາກຂອງເຮົາເປັນນ້ຳເລິກ; ນ້ຳພຸແຫ່ງປັນຍາເປັນທານແຫ່ງນ້ຳໄຫລ.
[5]ການລຳອຽງເຂົ້າຂ້າງຄົນອະທຳນັ້ນບໍ່ດີ, ການເອົາຄວາມຍຸດຕິທຳໄປຈາກຄົນຊອບທຳກໍບໍ່ດີດ້ວຍ.[6]ເມື່ອຄົນໂງ່ຈ້າຜິດຖຽງກັນ
ການຊົກຕີກັນກໍມັກຈະເກີດຂຶ້ນ.
[7]ປາກຂອງຄົນໂງ່ເປັນສິ່ງທຳລາຍຕົວເຂົາເອງ ແລະປາກຂອງເຂົາກໍເປັນບ້ວງດັກເຂົາເອງ.[8]ຖ້ອຍຄຳຂອງຄົນທີ່ຊຸບຊິບກໍຄືອາຫານທີ່ມີລົດຊາດແຊບ
ແລະມັນລົງເລິກໄປຍັງສ່ວນຕ່າງໆ ໃນຮ່າງກາຍ.
[9]ຄົນກຽດຄ້ານໃນການງານ ກໍເປນທີ່ພີ່ນອງຫລາຍຄົນຊອບທຳຫລາຍ.[10]ພຣະນາມຂອງພຣະຢາເວເປັນປ້ອມທີ່ເຂັ້ມແຂງ,
ບຸກຄົນທີ່ຊອບທຳແລ່ນເຂົ້າໄປໃນນັ້ນແລະປອດໄພ.
[11]ແລະໃນຄວາມຄິດເຫັນຂອງຄົນມັ່ງມີເປັນເມືອງ ທີ່ເຂັ້ມແຂງຂອງເຂົາມັນເປັນຄືກຳແພງທີ່ສູງ.[12]ກ່ອນທີ່ເຂົາຈະຖືກທຳລາຍ,
ແຕ່ຄວາມຖ່ອມໂຕມາກ່ອນກຽດ.
[13]ຄົນທີ່ຕອບກ່ອນຈະຟັງ ກໍເປັນຄວາມໂງ່ ແລະຄວາມຂາຍໜ້າແກ່ເຂົາ.[14]ຈິດໃຈຂອງບຸກຄົນຈະທົນຕໍ່ຄວາມເຈັບປ່ວຍໄດ້,
ແຕ່ຈິດໃຈຂອງຄົນຊ້ຳໃຜຈະທົນໄດ້?.
[15]ໃຈຂອງຄົນທີ່ມີຄວາມເຂົ້າໃຈຍ່ອມໄດ້ຄວາມຮູ້ ແລະການໄດ້ຟັງຂອງຄົນມີປັນຍາສະແຫວງຫາຄວາມຮູ້.
[16]ມີຂອງຂວັນໄປພ້ອມໄຂຊ່ອງທາງໃຫ້ຄົນນັ້ນ ແລະນຳເຂົາມາເຖິງຄົນໃຫຍ່ຄົນໂຕ.
[17]ຜູ້ເປັນທະນາຍຂອງຕົນກໍເບິ່ງເປັນຝ່າຍຖືກ ຈົນກວ່າຝ່າຍຕົງຂ້າມຈະມາຄັດຄ້ານເຂົາ.[18]ການຈັບສະຫລາກເຮັດໃຫ້ ການຜິດກັນສິ້ນສຸດລົງ
ແລະແຍກຄູ່ໂຕ້ຖຽງທີ່ມີກຳລັງອອກຈາກກັນ.
[19]ຄວາມຊ່ວຍເຫລືອຂອງອ້າຍນ້ອງກໍສຳກັບກຳແພງເມືອງທີ່ເຂັ້ມແຂງ, ແຕ່ການຜິດຖຽງກັນກໍຊໍ່າກັນກັບເຫລັກໄລປະຕູອັດຕັນຕົນໄວ້.
[20]ທ້ອງຂອງຄົນຈະອີ່ມດ້ວຍຜົນແຫ່ງປາກຂອງເຂົາ; ເຂົາຈະເຕັມອີ່ມດ້ວຍຜົນຜະລິດແຫ່ງປາກຂອງເຂົາ.
[21]ຄວາມຕາຍແລະຊີວິດຢູ່ໃນອຳນາດຂອງລີ້ນ, ແລະບຸກຄົນນັ້ນທີ່ຮັກລີ້ນກໍຈະກິນຜົນຂອງມັນ.[22]ໃຜພົບເມຍກໍພົບຂອງດີ
ແລະໄດ້ຄວາມໂປດປານຈາກພຣະຢາເວ.
[23]ບຸກຄົນຍາກຈົນໃຊ້ຄຳອ້ອນວອນ, ແຕ່ບຸກຄົນຮັ່ງມີຕອບສຽງຫ້ວນໆ.[24]ຄົນທີ່ກ່າວວ່າເຂົາມີໝູ່ຫລາຍຊຶ່ງພວກເຂົານຳຫາຍຍະນະມາໃຫ້,
ແຕ່ມີສະຫາຍຍຶ່ງກວ່າພີ່ນ້ອງ.

 generated on Tue Jun 17 19:01:42 2025

# 19

[1]ບຸກຄົນຍາກຈົນຜູ້ດຳເນີນໃນສັກສີຂອງເຂົາກໍດີກວ່າຄົນທີ່ເວົ້າບິດເບືອນ ແລະເປັນຄົນໂງ່ຈ້າ.
[2]ເຊັ່ນດຽວກັນກັບສິ່ງທີ່ບໍ່ດີທີ່ມີຄວາມກະຕືລືລົ້ນ, ແຕ່ປາສະຈາກຄວາມຮູ້ ແລະຄົນທີ່ເລັ່ງຕີນມັນຈະອອກນານອກເສັ້ນທາງ.

[3]ຄວາມໂງ່ຂອງບຸກຄົນທຳລາຍຊີວິດຂອງເຂົາເອງ ແລະຈິດໃຈຂອງເຂົາກໍກ້ຽວກາດຕໍ່ພຣະຢາເວ.[4]ຊັບສິນບັດເຮັດໃຫ້ມີຫມູ່ຫລວງຫລາຍ,
ແຕ່ຄົນຍາກຈົນກໍຖືກເພື່ອນບ້ານຕີຈາກ.
[5]ພະຍານເວົ້າຕົວະກໍຈະຖືກລົງໂທດໃນສານ ແລະຄົນເວົ້າຕົວະຕະຫລອດເວລາຈະຫນີບໍ່ພົ້ນ.[6]ຄົນຫລາຍມັກຈະປະຈົບປະແຈງ ຄົນໃຈກວ້າງ
ແລະທຸກຄົນກໍເປັນມິດກັບ.
[7]ຍາດພີ່ນ້ອງຂອງຄົນຍາກຈົນກໍຍັງຊັງເຂົາ; ແລ້ວຫມູ່ຈະຫນີຫ່າງຈາກເຂົາ, ໄປປານໃດ ແມ່ນເຂົາຕາມໄປວິງວອນ,
ແຕ່ພວກເຂົາກໍຫາຍຫນ້າກັນໄປຫມົດ.[8]ຄົນທີ່ໄດ້ປັນຍາກໍຮັກຊີວິດຕົນເອງ; ຄົນທີ່ຮັກສາຄວາມເຂົ້າໃຈໄວ້ຈະພົບແຕ່ສິ່ງດີ.
[9]ພະຍານເວົ້າຕົວະຈະຖືກລົງໂທດ, ແຕ່ຄົນເວົ້າຕົວະຕະຫລອດເວລາຈະພິນາດ.[10]ທີ່ຄົນໂງ່ຈະກິນຢູ່ຢ່າງຫລູຫລາກໍບໍ່ເຫມາະສົມຢູ່ແລ້ວ
ຍິ່ງບໍ່ເຫມາະຫລາຍກວ່ານັ້ນອີກທີ່ທາດຈະປົກຄອງເຈົ້ານາຍ.
[11]ຄວາມສະຫລາດຂອງບຸກຄົນທີ່ເຮັດໃຫ້ເຂົາຊັງ ແລະການໃຫ້ອະໄພຄວາມຜິດກໍເປັນສັກສີແກ່ເຂົາ.
[12]ຄວາມຮ້າຍຂອງກະສັດກໍຄືສຽງຄຳລາມຂອງສິງຫນຸ່ມ, ແຕ່ຄວາມໂປດປານຂອງພະອົງຄືນ້ຳຄ້າງຢູ່ຫຍ້າ.
[13]ລູກຊາຍທີ່ໂງ່ຈ້າເປັນຫາຍຍະນະແກ່ພໍ່ຂອງເຂົາ ແລະເມຍມັກຮ້າຍກໍຄືນ້ຳໄຫລຢົດບໍ່ຢຸດ.[14]ບ້ານກັບຊັບສິນບັດເປັນມໍລະດົກຈາກພໍ່,
ແຕ່ເມຍທີ່ສະຫລາດມາຈາກພຣະຢາເວ.
[15]ຄວາມກຽດຄ້ານເຮັດໃຫ້ບຸກຄົນຫລັບສະນິດ, ແຕ່ຄົນທີ່ບໍ່ຢາກເຮັດວຽກກໍຈະຫິວ.[16]ຄົນທີ່ຮັກສາບັນຍັດຍ່ອມປົກປ້ອງຊີວິດຂອງເຂົາ,
ແຕ່ບຸກຄົນທີ່ບໍ່ຄຳນຶງເຖິງທາງຂອງເຂົາກໍຈະຕາຍ.
[17]ບຸກຄົນໃດກໍຕາມທີ່ເມດຕາຄົນຍາກຈົນກໍໃຫ້ພຣະຢາເວຊົງຢືມ ແລະພຣະອົງຈະຕອບແທນການກະທຳຂອງເຂົາ.
[18]ຈົ່ງຕີສອນລູກຊາຍຂອງເຈົ້າເມື່ອຂະນະທີ່ຍັງມີຄວາມຫວັງ ແລະຢ່າຈົ່ງໃຈເຮັດໃຫ້ເຂົາພິນາດໄປ.
[19]ບຸກຄົນທີ່ໃຈຮ້າຍຈະຕ້ອງໄດ້ຮັບການລົງໂທດ, ເພາະຖ້າເຈົ້າຊ່ວຍເຂົາແລ້ວ ເຈົ້າກໍຈະຕ້ອງຊ່ວຍເຂົາອີກ.
[20]ຈົ່ງຟັງຄຳແນະນຳແລະຮັບການສັ່ງສອນ, ເພື່ອເຈົ້າຈະໄດ້ມີປັນຍາຈົນເຖິງວາລະສຸດທ້າຍແຫ່ງຊີວິດ.
[21]ໃນໃຈຂອງມະນຸດມີແຜນງານຫລາຍ, ແຕ່ຈຸດປະສົງຂອງພຣະຢາເວຈະດຳລົງຢູ່.[22]ຄວາມຈົ່ງຮັກພັກດີຄືສິ່ງທີ່ຫນ້າປາຖະຫນາໃນໂຕມະນຸດ
ແລະບຸກຄົນຍາກຈົນດີກວ່າຄົນເວົ້າຕົວະ.
[23]ຄວາມຢຳເກງພຣະຢາເວນຳປະຊາຊົນໄປສູ່ຊີວິດ, ຜູ້ໃດກໍຕາມທີ່ຢຳເກງພຣະອົງຈະຢູ່ຢ່າງຜາສຸກແລະຈະບໍ່ມີສິ່ງຮ້າຍໃດໆມາແຕະຕ້ອງໄດ້.
[24]ຄົນທີ່ຂີ້ຄ້ານຝັງມືເຂົາໄວ້ໃນຊາມ, ເຂົາບໍ່ຍອມແມ່ນແຕ່ຈະຢິບອາຫານເຂົ້າປາກຂອງເຂົາ.
[25]ຈົ່ງຕີຄົນທີ່ເວົ້າເຢາະເຢີ້ຍ, ແລະຄົນຮູ້ນ້ອຍຈະກາຍເປັນໂງ່, ຈົ່ງຕັກເຕືອນຄົນທີ່ມີຄວາມເຂົ້າໃຈແລະເຂົາຈະໄດ້ຮູ້.
[26]ຄົນທີ່ປຸ້ນພໍ່ຂອງເຂົາແລະຂັບໄລ່ແມ່ຂອງເຂົາ ເປັນລູກຊາຍທີ່ນຳຄວາມອັບອາຍແລະນຳຄວາມເຊື່ອມເສຍມາໃຫ້.[27]ລູກຊາຍເອີຍ,
ຖ້າເຈົ້າບໍ່ຟັງຄຳສັ່ງສອນ, ເຈົ້າກໍຈະຫລົງໄປຈາກຖ້ອຍຄຳແຫ່ງຄວາມຮູ້.
[28]ພະຍານສໍ້ສົນຍ່ອມເຢາະເຢີ້ຍຄວາມຍຸດຕິທຳ ແລະປາກຂອງຄົນອະທຳກໍກືນກິນສິ່ງຊົ່ວຮ້າຍ.
[29]ການພິພາກສາມີພ້ອມສຳລັບຄົນທີ່ມັກເຢາະເຢີ້ຍ ແລະການໂບຍຕີມີໄວ້ສຳລັບຫລັງຂອງຄົນໂງ່.


generated on Tue Jun 17 19:01:42 2025

20 [1]ເຫລົ້າອະງຸ່ນເຮັດໃຫ້ເປັນຄົນມັກເຢາະເຢີ້ຍແລະການກິນເຫລົ້າກໍເຮັດໃຫ້ຂວາງ, ໃຜກໍຕາມທີ່ກິນເຂົ້າໄປແລ້ວບໍ່ມີປັນຍາ,
[2]ຄວາມຢ້ານຂອງກະສັດຄືກັບຄວາມຢ້ານຂອງສິງຫນຸ່ມ, ໃຜເຮັດໃຫ້ພະອົງໃຈຮ້າຍກໍສ່ຽງຊີວິດຂອງຕົນເອງ.

[3]ທີ່ຈະຫລີກລ້ຽງການວິວາດກໍເປັນກຽດສຳລັບຄົນເຮົາ, ແຕ່ຄົນໂງ່ທຸກຄົນຈະຜິດກັນ.[4]ບຸກຄົນທີ່ຂີ້ຄ້ານບໍ່ໄຖນາໃນລະດູເຮັດນາ;
ເຂົາຈະເບິ່ງພືດຜົນໃນລະດູເກັບກ່ຽວແຕ່ບໍ່ພົບຫຍັງເລີຍ.
[5]ຈຸດປະສົງໃນໃຈຄືນ້ຳເລິກ, ແຕ່ຄົນທີ່ມີຄວາມເຂົ້າໃຈຈະຫວິດມັນອອກມາໄດ້.[6]ບຸກຄົນທັງຫລາຍປ່າວຮ້ອງຄວາມຈົງຮັກພັກດີຂອງຕົນເອງ,
ແຕ່ໃຜຈະຫາຄົນສື່ສັດພົບ?.
[7]ຄົນຊອບທຳດຳເນີນໃນຄວາມສັດຊື່ຂອງເຂົາ, ແລະລູກຫລານທັງຫລາຍຂອງເຂົາທີ່ເກີດຕາມມາເປັນສຸກ.
[8]ກະສັດຜູ້ນັ່ງເທິງບັນລັງເພື່ອເຮັດຫນ້າທີ່ພິພາກສາ ຊົງແຍກແຍະຄວາມຊົ່ວທຸກຢ່າງອອກດ້ວຍຕາຂອງພະອົງ.
[9]ໃຜຈະເວົ້າໄດ້ວ່າ, "ຂ້ານ້ອຍເຮັດໃຫ້ໃຈຂອງໂຕເອງສະອາດແລ້ວ; ຂ້ານ້ອຍບໍຣິສຸດພົ້ນບາບແລ້ວ"?[10]ຕຸ້ມນ້ຳຫນັກສໍ້ສົນແລະເຄື່ອງຕວງຂີ້ໂກງ
ທັງຄູ່ຕ່າງເປັນທີ່ກຽດຊັງຂອງພຣະຢາເວ.
[11]ແມ່ນແຕ່ເດັກກໍເຜີຍໂຕເອງອອກມາໂດຍການປະພຶດຂອງເຂົາ, ວ່າສິ່ງທີ່ເຂົາເຮັດບໍຣິສຸດແລະຖືກຕ້ອງບໍ່.[12]ຫູທີ່ໄດ້ຍິນກັບດວງຕາທີ່ເບິ່ງເຫັນ
ພຣະຢາເວຊົງສ້າງທັງສອງຢ່າງ.
[13]ຢ່າຮັກການນອນຫລັບ ເກງວ່າເຈົ້າຈະຍາກຈົນ; ຈົ່ງມືນຕາຂອງເຈົ້າ ແລະເຈົ້າຈະໄດ້ກິນອີ່ມ.[14]" ຜູ້ຊື້ເວົ້າວ່າ" ຂອງບໍ່ດີ",
ແຕ່ເມື່ອເຂົາໄປແລ້ວເຂົາຈຶ່ງອວດວ່າໂຕຊື້ຂອງໄດ້ຖືກ.
[15]ທອງຄຳແລະອັນຍະມະນີທີ່ມີຄ່າຢ່າງຫລວງຫລາຍ, ແຕ່ປາກທີ່ມີຄວາມຮູ້ກໍເປັນຂອງລ້ຳຄ່າຍິ່ງ.[16]ຜູ້ໃດຜູ້ຫນຶ່ງທີ່ຮັບໃຊ້ຫນີ້ສິນຄົນແປກຫນ້າ,
ແລະຈົ່ງຍຶດຫມັ້ນໄວ້ໃນເມື່ອເຂົາປະກັນໃຫ້ຜູ້ຍິງເສເພ.
[17]ອາຫານທີ່ໄດ້ມາຈາກການຫລອກລວງມີລົດຫວານແກ່ຜູ້ທີ່ໄດ້ມາ, ແຕ່ພາຍຫລັງປາກຂອງເຂົາຈະເຕັມໄປດ້ວຍລວດລາຍ.
[18]ແຜນການສຳເລັດໄດ້ເພາະຄຳປຶກສາ ແລະເມື່ອມີການນຳທີ່ສະຫລາດເທົ່ານັ້ນ ຖ້າຄິດຈະກໍ່ສົງຄາມ.
[19]ຄົນທີ່ທ່ຽວຊຸບຊິບຍ່ອມເຜີຍຄວາມລັບແລະດັ່ງນັ້ນຢ່າເຂົ້າສັງຄົມກັບຄົນປາກບອນ.[20]ຖ້າບຸກຄົນແຊ່ງພໍ່ຂອງເຂົາຫລືແມ່ຂອງເຂົາ,
ຊີວິດຂອງເຂົາຈະດັບໃນຄວາມມືດ.
[21]ມໍລະດົກທີ່ໄດ້ມາຢ່າງຊຸ່ງສຸກກ່ອນເຫີມໃນຕົ້ນ ທີ່ສຸດຂອງປາຍກໍບໍ່ເປັນມົງຄົນ.[22]ຢ່າເວົ້າວ່າ, "ຂ້ອຍຈະແກ້ແຄ້ນຄວາມຊົ່ວນີ້!"
ຈົ່ງລໍຄອຍພຣະຢາເວ ພຣະອົງຈະຊົງຊ່ວຍເຈົ້າ.
[23]ພຣະຢາເວຊົງກຽດຊັງຕຸ້ມນ້ຳຫນັກສໍ້ສົນ ແລະຕາຊັ່ງຂີ້ໂກງກໍບໍ່ດີ.[24]ພຣະຢາເວຊົງກຳນົດທາງເດີນຂອງພວກເຂົາ,
ໃຜຈະເຂົ້າໃຈທິດທາງຊີວິດຂອງຕົນເອງໄດ້ຢ່າງໃດ?.
[25]ຈົ່ງຄິດໃຫ້ດີກ່ອນຈຶ່ງສັນຍາຕໍ່ພຣະເຈົ້າ, ວ່າຈະຖວາຍບູຊາຕໍ່ມາອາດສະເສຍໃຈຕາມພາຍຫລັງກໍໄດ້[26]ກະສັດທີ່ມີປັນຍາຈະຮູ້ວ່າແມ່ນໃຜຜິດ
ແລະລົງໂທດທັນທີໂດຍບໍ່ມີຄວາມເມດຕາຈັກດີ.
[27]ພຣະຢາເວໃຫ້ຈິດໃຈແລະຈິດສຳນຶກແກ່ເຮົາ, ເຮົາບໍ່ສາມາດປິດບັງຈາກຕົນເອງໄດ້.[28]ຄວາມຈົງຮັກພັກດີແລະຄວາມຊື່ສັດພິທັກກະສັດໄວ້;
ເພິ່ນຈະຊົງເຮັດໃຫ້ພະທີ່ນັ່ງຫມັ້ນຄົງດ້ວຍຄວາມຮັກ.
[29]ສັກສີຂອງບັນດາຄົນຫນຸ່ມຄືກຳລັງຂອງພວກເຂົາ ແຕ່ຄວາມສະຫງ່າງາມຂອງປະຊາຊົນສູງໄວຄືຜົມຫງອກຂອງພວກເຂົາ.
[30]ການຕີເຮັດໃຫ້ເກີດບາດແຜກໍຊຳລະຄວາມຊົ່ວອອກໄປ ແລະການໂບຍຕີກໍຊຳລະລ້າງສ່ວນເລິກພາຍໃນ.

 generated on Tue Jun 17 19:01:42 2025

21 1ໃຈຂອງກະສັດຄືສາຍນ້ຳທີ່ມືຂອງພຣະຢາເວ; ພຣະອົງຈະຊົງເຮັດໃຫ້ນ້ຳໄຫລໄປໄສກໍຕາມ ແຕ່ຈະໂປດ.
2ທາງທຸກສາຍຂອງມະນຸດກໍຖືກຕ້ອງໃນສາຍຕາຂອງເຂົາເອງ. ແຕ່ພຣະຢາເວຊົງກວາດເບິ່ງຈິດໃຈທັງຫລາຍ.

3ການປະພຶດຊອບທຳແລະຍຸດຕິທຳເປັນທີ່ໂປດປານ ແຕ່ພຣະຢາເວຫລາຍກວ່າເຄື່ອງບູຊາ. 4ການຫລອກລວງ ແລະການອວດດີ
ສິ່ງເຫລົ່ານີ້ເປັນບາບກຳທີ່ຄວບຄຸມຄົນຊົ່ວຮ້າຍ.
5ແຜນງານທັງຫລາຍຂອງຄົນຂະຫຍັນນຳໄປສູ່ຄວາມມັ່ງຄັ່ງແນ່ນອນ, ແຕ່ການວາງແຜນຢ່າງໄວວາພາໃຫ້ທຸກໄດ້.
6ການຮັບຊັບມາດ້ວຍການຕົວະ ກໍຄືຫມອກທີ່ຈາງຫາຍ ແລະກັບດັກແຫ່ງຄວາມຕາຍ.
7ຄວາມທາລຸນຂອງຄົນອະທຳຈະກວາດພວກເຂົາໄປ, ເພາະພວກເຂົາບໍ່ຍອມເຮັດສິ່ງທີ່ຍຸດຕິທຳ. 8ທາງຂອງຄົນບາບຫນານັ້ນຄົດ,
ແແຕ່ທາງຂອງຄົນບໍຣິສຸດນັ້ນເຮັດໃຫ້ທາງທ່ຽງຕົງ.
9ໄດ້ອາໄສຢູ່ທີ່ຊອກມຸມຂອງດາດຟ້າ ກໍດີກວ່າຢູ່ຮ່ອມຊາຍຄາບ້ານກັບຜົວເມຍທີ່ມັກຖຽງກັນ. 10ຄວາມອະທຳຍ່ອມປາຖະຫນາຄວາມຊົ່ວ,
ເພື່ອນບ້ານຂອງເຂົາຈຶ່ງໄດ້ຮັບຄວາມເມດຕາ.
11ເມື່ອຄົນມັກເຢາະເຢີ້ຍໄດ້ຮັບການລົງໂທດ, ຄົນຮູ້ນ້ອຍຈຶ່ງມີປັນຫາ, ແລະເມື່ອຄົນມີປັນຫາໄດ້ຮັບການສັ່ງສອນ, ເຂົາຈຶ່ງໄດ້ຄວາມຮູ້.
12ບຸກຄົນຜູ້ຊອບທຳວິເຄາະເບິ່ງບ້ານຂອງຄົນອະທຳ; ເຂົາຈະນຳຄວາມພິນາດມາໃຫ້ຄົນອະທຳ.
13ຄົນທີ່ປິດຫູບໍ່ຟັງສຽງຮ້ອງທຸກຂອງຄົນຈົນ, ເຂົາອງຈະຮ້ອງເຊັ່ນກັນ, ແຕ່ບໍ່ມີໃຜຕອບເຂົາ.
14ໃຜໃຈຮ້າຍເຈົ້າຈຶ່ງເອົາຂອງຂວັນໃຫ້ລັບໆແລ້ວຄວາມຮ້າຍນັ້ນກໍຈະຜ່ອນຄາຍລົງ.
15ເມື່ອມີການປະຕິບັດຢ່າງຍຸດຕິທຳບຸກຄົນຊອບທຳກໍຍິນດີ, ແຕ່ຄົນປະພຶດຊົ່ວກໍຢ້ານແລະລະແວງ. 16ຄົນທີ່ຫລົງໄປຈາກທາງແຫ່ງຄວາມເຂົ້າໃຈ,
ເຂົາຈະພັກຢູ່ໃນທີ່ຊຸມນຸມຂອງຄົນຕາຍ.
17ຄົນທີ່ຮັກຄວາມບັນເທີງຈະເປັນຄົນຍາກຈົນ, ຄົນທີ່ຮັກເຫລົ້າອະງຸ່ນ ແລະນ້ຳມັນຈະບໍ່ຮັ່ງມີຈັກເທື່ອ. 18ຄົນອະທຳເປັນຄ່າໄຖ່ບຸກຄົນໆຊອບທຳ,
ແລະຄົນທໍລະຍົດເປັນຄ່າໄຖ່ປະຊາຊົນຜູ້ທ່ຽງທຳ.
19ອາໄສຢູ່ໃນທະເລຊາຍ ກໍດີກວ່າຢູ່ກັບຜູ້ຍິງທີ່ມັກແຕ່ຮ້າຍດ່າຜົວຂອງຕົນ ແລະຈູ້ຈີ້. 20ຄົນທີ່ມີປັນຍາເຂົ້າເມືອງຂອງຄົນທີ່ມີກຳລັງ,
ແຕ່ພັງທະລາຍທີ່ມັນຊຶ່ງເຂົາໄວ້ວາງໃຈ.
21ຄົນທີ່ຕິດຕາມຄວາມຊອບທຳ ແລະມີຄວາມກະລຸນາ, ບຸກຄົນຢ່າງນີ້ຈະພົບຊີວິດຄວາມຊອບທຳ, ແລະກຽດຕິຍົດ.
22ຄົນມີປັນຍາປີນເຂົ້າເມືອງຂອງຄົນມີກຳລັງ, ແລະພັງທະລາຍກຳແພງທີ່ເຂົາໄວ້ວາງໃຈ.
23ບຸກຄົນໃດກໍຕາມທີ່ລະວັງປາກແລະລີ້ນຂອງເຂົາ ກໍປົກປ້ອງໂຕເອງຈາກຄວາມຫຍຸ້ງຍາກ. 24ຄົນໂອຫັງອວດດີດູຖູກທຸກແນວ
ການປະພຶດຂອງລາວກໍລ້ວນຂີ້ສະຫາວທັງນັ້ນ.
25ຄວາມຍາກຂອງຄົນກຽດຄ້ານຂ້າໂຕເຂົາເອງ, ເພາະມືເຂົາບໍ່ຍອມເຮັດວຽກ. 26ບາງຄົນໃຊ້ຊີວິດເພື່ອໂລບມາກໂລພາ,
ແຕ່ວ່າຄົນຊອບທຳສາມາດໃຫ້ດ້ວຍໃຈສັດທາ ແລະບໍ່ຫວງຄືນ.
27ເຄື່ອງບູຊາຂອງຄົນອະທຳເປັນສິ່ງຫນ້າກຽດຊັງ, ແລະຫຍິ່ງກວ່ານັ້ນເມື່ອເຂົານຳມາດ້ວຍເຈດຕະນາຊົ່ວ.
28ພະຍານຂອງຄົນຂີ້ຕົວະເປັນຄົນທີ່ເຊື່ອຖືບໍ່ໄດ້ແລະຈະພິນາດ, ແຕ່ຄົນທີ່ຟັງຈະເວົ້າໄດ້ທຸກເວລາ.
29ຄົນອະທຳໃຫ້ຫນ້າຂອງເຂົາຊາໄປ, ແຕ່ຄົນທ່ຽງທຳວິເຄາະເບິ່ງທາງທັງຫລາຍຂອງເຂົາ.
30ຄວາມເຂົ້າໃຈ ຄວາມຫລັກແຫລມ, ແຖມປັນຍາກໍບໍ່ມີຄຸນຄ່າ, ແລະ ເອົາຊະນະພຣະຢາເວບໍ່ໄດ້. 31ມ້າກໍຕຽມໄວ້ແລ້ວສຳລັບວັນເຮັດເສິກ,
ແຕ່ໄຊຊະນະເປັນຂອງພຣະຢາເວ.

22 [1]ຄວນເລືອກຊື່ສຽງດີ ດີກວ່າຄວາມຮັ່ງມີມາກມາຍ ແລະມີຄົນນັບຖືກໍດີກວ່າມີເງິນຄໍາ.[2]ປະຊາຊົນທີ່ຮັ່ງມີ
ແລະປະຊາຊົນທີ່ຍາກຈົນຄືກັນຢູ່ຢ່າງຫນຶ່ງ ຄືພຣະຢາເວຊົງເປັນຜູ້ສ້າງພວກເຂົາ.

[3]ຄົນທີ່ຢັ່ງຮູ້ຍ່ອມເຫັນຄວາມເດືອດຮ້ອນຈະມາເຖິງ ຈຶ່ງຮູ້ຈັກຊ່ອນຊົ້ນຕົນຫລົບຫລີກມັນໄດ້,
ແຕ່ຄົນບໍ່ຄິດຈະຍ່າງກົງເຂົ້າໄປແລະກໍເສຍໃຈຕໍ່ມາພາຍຫລັງ.[4]ບໍາເນັດຂອງຄົນຖ່ອມຕົນ, ແລະຄວາມຢໍາເກງພຣະຢາເວ, ຄືຄວາມຮັ່ງມີ
ກຽດແລະຊີວິດ.
[5]ແຕ່ຄົນຮັກຊີວິດຈະພົ້ກຫນີຈາກມັນໄດ້.[6]ຈົ່ງອົບຮົມເດັກນ້ອຍໃນທາງທີ່ຖືກຕ້ອງ ແລະເມື່ອເຂົາເປັນຜູ້ໃຫຍ່ແລ້ວ ເຂົາຈະບໍ່ຫນີຈາກທາງນັ້ນ.
[7]ປະຊາຊົນທີ່ຮັ່ງມີທີ່ມີອໍານາດເຫນືອຄວາມຍາກຈົນ ແລະຜູ້ຂໍຢືມກໍເປັນທາດຂອງຜູ້ໃຫ້ຢືມ.
[8]ຜູ້ຫວ່ານຄວາມອະຍຸດຕິທໍາຈະເກັບກ່ຽວສິ່ງຊົ່ວຮ້າຍ ແລະໄມ້ທີ່ແຫ້ງຄວາມກ້ຽວກາດຂອງເຂົາຈະສິ້ນໄປ.
[9]ຄົນເບິ່ງຢ່າງໃຈກວ້າງຂວາງຈະໄດ້ຮັບພຣະພອນ, ເພາະເຂົາແບ່ງອາຫານຂອງເຂົາແກ່ຄົນຍາກຈົນ.[10]ຈົ່ງໄລ່ຄົນມັກເຢາະເຢີ້ຍໄປໃຫ້ຫມົດສິ້ນ;
ແລ້ວການວິວາດຜິດຖຽງກັນຈະຫມົດໄປ.
[11]ຜູ້ທີ່ເປັນຫມູ່ກັນກັບກະສັດໄດ້ຕ້ອງມີຄວາມຈິງໃຈ ແລະເວົ້າຈາສຸພາບອ່ອນຫວານ.[12]ພຣະເນດຂອງພຣະຢາເວເຝົ້າຮັກສາຄວາມຮູ້,
ແຕ່ພຣະອົງທໍາລາຍຖ້ອຍຄໍາຂອງຄົນບໍ່ມີຄວາມເຊື່ອ
[13]ບຸກຄົນທີ່ຂີ້ຄ້ານເວົ້າວ່າ, "ມີສິ່ງມີສິ່ງໃຫຍ່ຢູ່ຂ້າງນອກ!
ຂ້ອຍຈະຖືກຂ້າກາງລານເມືອງ."[14]ປາກຂອງຄົນຫລິ້ນຊູ້ສູ່ຜົວເມຍເປັນປ່ວງເຮັ້ວແກ່ຕົນ; ມັນຄອຍດັກຈັບຄົນທີ່ພຣະຢາເວໂກດຮ້າຍ.
[15]ຄວາມໂງ່ຕິດຢູ່ໃນໃຈເດັກນ້ອຍ, ແຕ່ໄມ້ແສ້ທີ່ຕີສອນຈະໄລ່ຄວາມໂງ່ໃຫ້ຫ່າງຈາກເຂົາ.
[16]ຄົນທີ່ບີບບັງຄັບປະຊາຊົນຍາກຈົນເພື່ອໃຫ້ເຂົາຮັ່ງມີຍິ່ງຂຶ້ນ, ຫລືຄົນທີ່ໃຫ້ແກ່ຄົນມັ່ງຄັ່ງ, ຈະມາເຖິງຄວາມຂັດສົນແນ່ນອນ.
[17]ຈົ່ງງ່ຽງຫູຂອງເຈົ້າຟັງຖ້ອຍຄໍາຄົນມີປັນຍາ ແລະເອົາໃຈໃສ່ຄວາມຮູ້ຂອງເຂົາ,[18]ເພາະມັນຫນ້າສົນໃຈຖ້າເຈົ້າຈືຈໍາສິ່ງເຫລົ່ານັ້ນໄວ້,
ແລະພ້ອມທີ່ຈະເວົ້າອອກມາ.[19]ເພື່ອເຈົ້າຈະວາງໃຈໃນພຣະຢາເວ, ຂ້ອຍຈຶ່ງສອນສິ່ງເຫລົ່ານັ້ນໃຫ້ເຈົ້າໃນວັນນີ້.
[20]ຂ້ອຍໄດ້ຂຽນໃຫ້ເຈົ້າສາມສິບຕອນ ຄວາມເປັນຄໍາເຕືອນໃຈ ແລະຄວາມຮູ້ແລ້ວບໍ່ແມ່ນບໍ,[21]ເພື່ອສອນໃຫ້ເຈົ້າຮູ້ຖ້ອຍຄໍາແຫ່ງຄວາມຈິງ,
ທີ່ເຊື່ອຖືໄດ້ ເພື່ອເຈົ້າຈະນໍາຖ້ອຍຄໍາແຫ່ງຄວາມຈິງກັບໄປບອກຜູ້ທີ່ໃຊ້ເຈົ້າມາບໍ່ແມ່ນບໍ?
[22]ຢ່າປຸ້ນຄົນຈົນ ເພາະເຂົາເປັນຄົນຈົນ, ຫລືຢ່າບີບບັງຄັບເຂັ້ນໃຈທີ່ປະຕູເມືອງ.[23]ເພາະພຣະຢາເວຊົງວ່າຄວາມແທນພວກເຂົາ,
ແລະພຣະອົງຈະຂູ່ເອົາຊີວິດຜູ້ທີ່ປຸ້ນພວກເຂົາ.
[24]ຢ່າເປັນຫມູ່ກັບຄົນມີແນວຄິດ ແລະໃຊ້ຄວາມຮຸນແຮງ,[25]ຫລືເຈົ້າຈະຮຽນຮູ້ທາງຂອງເຂົາ ແລະເຈົ້າຈະເອົາໃຈຂອງເຈົ້າເອງໄປຕິດກັບດັກ.
[26]ຢ່າເປັນຄົນທີ່ໃນຈໍາພວກທີ່ໃຫ້ຄໍາປະຕິຍານ, ຫລືໃນຈໍາພວກຜູ້ຄໍ້າປະກັນຫນີ້ສິນ.[27]ຖ້າເຈົ້າບໍ່ມີຊໍາລະຫນີ້ສິນ,
ແລ້ວຈະມີຫຍັງທີ່ຈະມາຍຶດທີ່ນອນຂອງເຈົ້າໄປຈາກເຈົ້າ.
[28]ຢ່າຍ້າຍຫລັກເຂດທີ່ບູຮານຊຶ່ງບັນພະບູຫລຸດຂອງເຈົ້າປັກໄວ້.[29]ເຈົ້າເຫັນຄົນທີ່ມີຝີມືໃນງານຂອງເຂົາບໍ? ເຂົາຈະຢືນຢູ່ສະເພາະຕໍ່ຫນ້າກະສັດ,
ທັງຫລາຍ ບໍ່ແມ່ນຢືນຢູ່ຕໍ່ຫນ້າສາມັນຊົນ.


generated on Tue Jun 17 19:01:42 2025

23 1ເມື່ອເຈົ້ານັ່ງຮັບປະທານກັບຜູ້ຄອບຄອງ, ຈົ່ງສັງເກດໃຫ້ດີວ່າໃຜຢູ່ຂ້າງຫນ້າເຈົ້າ, 2ແລະເຈົ້າຈົ່ງບັງຄັບຕົວໄວ້ຖ້າເຈົ້າເປັນຄົນກິນຫລາຍ.
3ຢ່າໂລບມາກໃນອາຫານທີ່ຄົນຍໍມາໃຫ້, ລາວອາດເຈດຕະນາເຮັດບໍ່ດີແກ່ເຈົ້າກໍໄດ້.

4ຢ່າເຮັດວຽກຫນັກເກີນໄປເພື່ອຈະມີຄວາມຮັ່ງມີ, ຈົ່ງສະຫລາດພໍທີ່ຈະຮູ້ວ່າຈະພັກເມື່ອໃດ. 5ເພາະວ່າເງິນຂອງເຈົ້າອາດສູນເສຍໃນພິບຕາກໍໄດ້,
ຄືກັບວ່າມັນມີປີກບິນໄປໄດ້ດັ່ງນົກອິນຊີ.
6ຢ່າກິນອາຫານຂອງຄົນທີ່ມີສາຍຕາຊົ່ວຮ້າຍ ຫລືຄົນໂລບມາກຢາກຫລາຍໃນອາຫານທີ່ດີທີ່ລາວຍົກມາ, 7ລາວເວົ້າວ່າເຊີນກິນ
ແລະ"ເອົາຕື່ມອີກກໍໄດ້", ແຕ່ໃຈຂອງເຂົາບໍ່ໄດ້ຢູ່ກັບເຈົ້າ. 8ເຈົ້າຈະສະມັກອາຫານທີ່ເຈົ້າໄດ້ກິນເຂົ້າໄປນັ້ນ
ແລະເສຍຖ້ອຍຄຳອ່ອນຫວານຂອງເຈົ້າໄປໂດຍເປົ່າປະໂຫຍດ.
9ຢ່າເວົ້າໃຫ້ຄົນໂງ່ໄດ້ຍິນ, ເພາະເຂົາຈະດູຫມິ່ນປະຫມາດຖ້ອຍຄຳຂອງເຈົ້າ. 10ຢ່າຍ້າຍຫລັກເຂດເກົ່າແກ່ ຫລືຍຶດທີ່ດິນຂອງລູກກຳພ້າ,
11ເພາະພຣະຜູ້ໄຖ່ຂອງເດັກກຳພ້ານັ້ນແຂງແຮງ ແລະພຣະອົງຈະສູ້ຄວາມກັບເຈົ້າໃນຄະດີຂອງພວກເຂົາ.
12ຈົ່ງເປີດໃຈຮັບຟັງຄຳສັ່ງສອນ ແລະຈົ່ງຟັງຖ້ອຍຄຳແຫ່ງຄວາມຮູ້.
13ຢ່າລະເລີຍກາສັ່ງສອນເດັກ, ເພາະຖ້າເຈົ້າຕີສອນເຂົາດ້ວຍໄມ້ ເຂົາຈະບໍ່ຕາຍ. 14ເຈົ້າຈະເປັນຜູ້ທີ່ຕີເຂົາດ້ວຍໄມ້
ແລະຊ່ວຍຊີວິດເຂົາໃຫ້ພົ້ນແດນຄົນຕາຍ.
15ລູກຊາຍຂອງເຮົາເອີຍ ຖ້າໃຈເຈົ້າມີປັນຍາ, ແລ້ວໃຈຂອງຂ້ອຍເອງກໍຈະຍິນດີດ້ວຍ, 16ເມື່ອປາກຂອງເຈົ້າເວົ້າສິ່ງທີ່ຖືກຕ້ອງ,
ຂ້ອຍຈະພາກພູມໃຈ.
17ຢ່າໃຫ້ໃຈຂອງເຈົ້າອິດສາຄົນບາບ, ແຕ່ຈົ່ງຢຳເກງພຣະຢາເວຕະຫລອດເວລາແລະຕໍ່ເນື່ອງ. 18ເພາະແນ່ນອນມີອານາຄົດສຳລັບເຈົ້າ
ແລະຄວາມຫວັງຂອງເຈົ້າຈະບໍ່ສະຫລາຍ.
19ລູກຊາຍຂອງເຮົາເອີຍ ເຈົ້າຈົ່ງຟັງ ແລະຈົ່ງມີປັນຍາ ແລະຈົ່ງນຳໃຈຂອງເຈົ້າໄປໃນທາງນັ້ນ. 20ຢ່າມົ້ວສຸມກັບຄົນຂີ້ເຫລົ້າ, ກິນຫລາຍໂພດ,
21ຄົນຂີ້ເມົາແລະຄົບໂລບຈະເປັນຄົນຍາກຈົນຖ້າເຈົ້າມີແຕ່ກິນກັບນອນເຈົ້າຈະໄດ້ນຸ່ງໂສ້ງຂາດ.
22ຈົ່ງຟັງພໍ່ເຈົ້າຜູ້ໃຫ້ກຳເນີດເຈົ້າ ແລະຢ່າຫມິ່ນປະຫມາດແມ່ຂອງເຈົ້າເມື່ອນາງແກ່. 23ຈົ່ງຊື້ຄວາມຈິງ, ແຕ່ຢ່າຂາຍໄປ, ຈົ່ງຊື້ປັນຍາ, ຄຳສັ່ງສອນ,
ແລະຄວາມຮອບຮູ້.
24ພໍ່ຂອງຄົນຊອບທຳຈະດີໃຈຢ່າງຍິ່ງ, ແລະຄົນທີ່ໃຫ້ກຳເນີດບຸດທີ່ມີປັນຍາຈະມີໃນເຂົາ. 25ຈົ່ງໃຫ້ພໍ່ແລະແມ່ຂອງເຈົ້າຍິນດີ
ຈົ່ງໃຫ້ຜູ້ທີ່ເກີດເຈົ້າພໍໃຈແລະດີໃຈ.
26ລູກຊາຍ, ຂອງເຮົາເອີຍ ຂໍໃຈຂອງເຈົ້າໃຫ້ເຮົາເຖາະ ແລະໃຫ້ຕາຂອງເຈົ້າຊື່ນຊົມໃນທາງທັງຫລາຍຂອງເຮົາ.
27ເພາະຍິງໂສເພນີເປັນຫລຸມເລິກ, ແລະເປັນບ້ວງແຮ້ວເຖິງແກ່ຄວາມຕາຍ. 28ນາງຫມອບຄອຍຢູ່ເຫມືອນໂຈນ
ແລະນາງເຮັດໃຫ້ມີຄົນບໍ່ຊື່ຕົງເພີ່ມຂຶ້ນໃນທ່າມກາງມະນຸດ.
29ໃຜທີ່ວິບັດ? ໃຜທີ່ຮ້ອງໄຫ້? ໃຜທີ່ມີເລື່ອງວິວາດຜິດຖຽງກັນ? ໃຜໂວຍວາຍ? ໃຜທີ່ມີແຜໂດຍບໍ່ຈຳເປັນ? ໃຜທີ່ມີຕາສອງຂ້າງກ່ຳ?
30ຄົນເຫລົ່ານັ້ນແລະພວກທີ່ແຊ່ຢູ່ເຫລົ້າອະງຸ່ນ, ພວກເຫລົ່ານັ້ນທີ່ໄປລອງດື່ມເຫລົ້າປະສົມ.
31ຢ່າເບິ່ງເຫລົ້າອະຫງຸ່ນເມື່ອມັນມີສີແດງ, ເມື່ອມັນເປັ່ງປະກາຍໃນຈອກ ແລະມັນໄຫລລົງໄປຢ່າງຄ່ອງຄໍ.
32ໃນທີ່ສຸດມັນຈະກັດເຫມືອນງູແລະຝັງແຂ້ວຄືງູພິດ. 33ດວງຕາຂອງເຈົ້າຈະເຫັນສິ່ງແປກໆ ແລະໃຈຂອງເຈົ້າຈະເວົ້າຄົດ.
34ເຈົ້າເປັນຄືຄົນທີ່ນອນຢູ່ກາງທະເລ ຫລືນອນຢູ່ຍອດເສົາທີ່ໂດກ ເຈົ້າຈະວ່າວິນວຽນ. 35"ພວກເຂົາຕີຂ້ອຍ," ຂ້ອຍບໍ່ຮູ້ສຶກເຈັບປວດ,
ແຕ່ຂ້ອຍຈະຕື່ນມື້ໃດ? ຂ້ອຍຈະສະແຫວງຫາການດື່ມອີກ.

 generated on Tue Jun 17 19:01:42 2025

24 [1]ຢ່າອິດສາຄົນເຫລົ່ານັ້ນທີ່ຊົ່ວ, ຫລືປາຖະໜາຢູ່ຮ່ວມກັບພວກເຂົາ.[2]ເພາະໃຈຂອງພວກເຂົາຄິດເຮັດການທາລຸນ
ແລະປາກຂອງເຂົາເວົ້າຮ້າຍ.

[3]ໂດຍປັນຍາ ບ້ານຈຶ່ງຖືກສ້າງຂຶ້ນແລະໂດຍຄວາມເຂົ້າໃຈມັນກໍຖືກສະຖາປານາໄວ້.[4]ໂດຍຄວາມຮູ້ຫ້ອງທັງຫລາຍກໍເຕັມໄປດ້ວຍຊັບລ້ຳຄ່າ
ແລະຄວາມມັ່ງຄັ່ງທີ່ໜ້າຊື່ນຊົມທັງໝົດ.
[5]ນັກຮົບແຫ່ງປັນຍາຍ່ອມມີອຳນາດຫລາຍ, ແລະຄົນມີຄວາມຮູ້ກໍມີກຳລັງຫລາຍຂຶ້ນ;[6]ເພາະໂດຍການນຳທີ່ສະຫລາດ ເຈົ້າຈະເຮັດສົງຄາມໄດ້
ໂດຍການສຶກສາຫລາຍຍ່ອມມີໄຊຊະນະ.
[7]ສຳລັບຄົນໂງ່ນັ້ນປັນຍາສູງເກີນໄປ, ຢູ່ໃນປະຕູເມືອງເຂົາບໍ່ອ້າປາກເວົ້າ.
[8]ຄົນທີ່ວາງແຜນເຮັດຊົ່ວ ປະຊາຊົນເອີ້ນເຂົາວ່າຍອດຄົນເຈົ້າເລ່.[9]ຄົນວາງແຜນທີ່ເປັນຄົນໂງ່ບາບ
ແລະບຸກຄົນມັກເຢາະເຢີ້ຍເປັນທີ່ກຽດຊັງຕໍ່ຄົນທັງຫລາຍ.
[10]ຖ້າເຈົ້າອ່ອນລ້າດ້ວຍຄວາມຢ້ານໃນວັນຍາກລຳບາກ, ແລ້ວກຳລັງຂອງເຈົ້າກໍໜ້ອຍ.
[11]ຈົ່ງຊ່ວຍຄົນເຫລົ່ານັ້ນທີ່ຖືກນຳໄປສູ່ຄວາມຕາຍ ແລະຈົ່ງຢັ້ງຄົນເຫລົ່ານັ້ນທີ່ກຳລັງໂຊເຊໄປສູ່ການຖືກຂ້າ.[12]ຖ້າເຈົ້າຈະວ່າ,"ເບິ່ງສາ,
ພວກເຮົາບໍ່ຮູ້ເລື່ອງນີ້ເລີຍ," ພຣະອົງພຣະຜູ້ຊົ່ງກວາດຈິດໃຈຈະບໍ່ທັນຮັບຮູ້ສິ່ງທີ່ເຈົ້າກຳລັງເວົ້າບໍ?
ພຣະອົງຜູ້ຊົງຄຸ້ມຄອງຊີວິດຂອງເຈົ້າຈະບໍ່ຊົງຮູ້ບໍ? ແລະພຣະເຈົ້າຈະບໍ່ປະທານໃຫ້ແຕ່ລະຄົນຕາມການກະທຳຂອງເຂົາບໍ?
[13]ລູກຊາຍຂອງເຮົາເອີຍ ຈົ່ງກິນນ້ຳເຜິ້ງເພາະເປັນຂອງດີ, ເພາະນ້ຳເຜິ້ງທີ່ຢົດຈາກຮັງນັ້ນມີລົດຊາດຫວານແກ່ລີ້ນຂອງເຈົ້າ.
[14]ປັນຍາກໍເປັນເຊັ່ນນັ້ນແກ່ວິນຍານຂອງເຈົ້າ, ຖ້າເຈົ້າພົບປັນຍາກໍພົບອານາຄົດ ແລະຄວາມຫວັງຂອງເຈົ້າຈະບໍ່ສະຫລາຍ.
[15]ຢ່າດັກຊຸ້ມທຳຮ້າຍຄືຄົນອະທຳທີ່ທຳລາຍທີ່ອາໄສຂອງຄົນຊອບທຳ. ຢ່າທຳລາຍທີ່ພັກຂອງເຂົາ!
[16]ເພາະບຸກຄົນຊອບທຳລົ້ມລົງເຈັດຄັ້ງແລ້ວລຸກຂຶ້ນອີກ, ແຕ່ປະຊາຊົນອະທຳຈະລົ້ມລົງໃນຄວາມລຳບາກ.
[17]ຢ່າເສຍໃຈເມື່ອສັດຕູຂອງເຂົາໄດ້ຮັບພິບັດ ແລະຢ່າໃຫ້ຈິດໃຈຂອງເຈົ້າຍິນດີເມື່ອເຫັນເຂົາລົ້ມ,[18]ເກງວ່າພຣະຢາເວຈະຊົງບໍ່ພໍພຣະໄທ
ແລະຊົງຫັນຄວາມກ້ຽວກາດຂອງເຂົາເສຍ.
[19]ຢ່າວິຕົກກັງວົນເພາະຄວາມບາບ, ແລະຢ່າອິດສາປະຊາຊົນທີ່ອະທຳ.[20]ເພາະບຸກຄົນຊົ່ວບໍ່ມີອານາຄົດ ແລະປະຊາຊົນທີ່ອະທຳຈະຖືກດັບສູນ
ລູກຊາຍຂອງເຮົາເອີຍ.
[21]ຈົ່ງຢຳເກງພຣະຢາເວ, ແລະເກງຢ້ານກະສັດ, ລູກເອີຍ; ຢ່າຄົບຫາກັບບັນດາຄົນກະບົດຕໍ່ທັງສອງພຣະອົງເລີຍ,
[22]ເພາະໄພພິບັດເຂົາຈະທຳລາຍເຂົາພິບຕາດຽວ ແລະຜູ້ໃດຈະຮູ້ໄພພິບັດທີ່ຈະມາຈາກທັງສອງນຳມາ?
[23]ຂໍ້ຄວາມເຫລົ່ານີ້ເປັນຄຳກ່າວຂອງຄົນມີປັນຍາດ້ວຍ ການລຳອຽງໃນການຕັດສິນຄະດີຄວາມນັ້ນບໍ່ດີເລີຍ.
[24]ຜູ້ໃດກໍຕາມທີ່ກ່າວແກ່ຄົນອະທຳວ່າ, "ເຈົ້າເປັນບຸກຄົນທີ່ຊອບທຳ," ຈະຖືກປະຊາຊົນແຊ່ງດ່າ ແລະເຫລົ່າປະຊາຊາດລັງກຽດ.
[25]ແຕ່ຜູ້ທີ່ປະນາມຄົນອະທຳຈະປິຕິຍິນດີ ແລະພອນອັນດີຈະມາຍັງພວກເຂົາ.
[26]ຄົນທີ່ໃຫ້ຄຳຕອບຕົງໄປຕົງມາໃຫ້ຄວາມເປັນໝູ່ແທ້ຈາກປາກຂອງເຂົາທີ່ໄດ້ເວົ້າອອກມາ.[27]ຈົ່ງຕຽມວຽກຂອງເຈົ້າ,
ແລະຈົ່ງເຮັດໃຫ້ມັນພ້ອມສຳລັບເຈົ້າໃນນາ ແລະທີ່ຫລັງຈາກນັ້ນ, ຈຶ່ງຄ່ອຍມີຄອບຄົວ
[28]ຢ່າເປັນພະຍານປັກປຳເພື່ອນບ້ານຂອງເຈົ້າ ຢ່າງບໍ່ມີເຫດຜົນແລະຢ່າລໍ້ລວງດ້ວຍປາກຂອງເຈົ້າ.[29]ຢ່າກ່າວວ່າ,
"ຂ້ອຍຈະເຮັດແກ່ເຂົາຢ່າງທີ່ເຂົາໄດ້ເຮັດແກ່ຂ້ອຍ; ຂ້ອຍຈະຕອບແທນເຂົາຕາມການກະທຳຂອງເຂົາ."
[30]ຂ້ອຍຜ່ານໄປທີ່ໄຮ່ນາຂອງຄົນກຽດຄ້ານ, ຂ້າງສວນອະງຸ່ນຂອງຄົນທີ່ບໍ່ມີສາມັນສຳນຶກ.[31]ມີໜາມງອກເຕັມໄປໝົດທົ່ວທຸກແຫ່ງ,
ໜ້າດິນກໍປົກຄຸມດ້ວຍຕົ້ນໜາມ, ແລະກຳແພງຫີນຂອງມັນກໍພັງລົງ.
[32]ແລ້ວເມື່ອຂ້ອຍເບິ່ງແລະໄດ້ວິເຄາະ, ຂ້ອຍເຫັນແລະຂ້ອຍໄດ້ຮັບຄະຕິເຕືອນໃຈ.[33]ນອນໜ້ອຍໜຶ່ງ, ນິດໜ້ອຍໜຶ່ງ,
ບໍ່ດອກພັກໜ້ອຍໜຶ່ງ.[34]ແລ້ວຄວາມຍາກຈົນຈະເດີນຂະບວນມາຫາເຈົ້າ, ແລະຄວາມຍາກຈົນຈະມາຢ່າງທະຫານຖືອາວຸດ.

 generated on Tue Jun 17 19:01:42 2025

25 [1]ຕໍ່ໄປນີ້ເປັນບັນດາສຸພາສິດອື່ນໆ ຂອງໂຊໂລໂມນ, ຊຶ່ງຄົນຂອງເຮເຊກີຢາ, ກະສັດແຫ່ງຢູດາຍໄດ້ຄັດລອກໄວ້.
[2]ຄວາມຍິ່ງໃຫຍ່ຂອງພຣະເຈົ້າຄືການປົກປິດສິ່ງຕ່າງໆໄວ້, ແຕ່ຄວາມຍິ່ງໃຫຍ່ຂອງກະສັດຄືການຄົ້ນສິ່ງນັ້ນໃຫ້ປາກົດ.[3]

[4]ຈົ່ງໄລ່ຂີ້ແຮ່ອອກຈາກເງິນ ແລະ ພວກຊ່າງເງິນຈະສາມາດໃຊ້ເງິນນັ້ນໃນງານຂອງເຂົາໄດ້.[5]ດັ່ງນັ້ນ,
ຈົ່ງໄລ່ປະຊາຊົນອະທໍາອອກໄປຈາກຫນ້າກະສັດ ແລະ ພຣະບັນລັງຂອງພຣະອົງຈະຖືກສະຖາປະນາໄວ້ດ້ວຍຄວາມຊອບທໍາ.
[6]ຢ່າຍົກຍ້ອງຕົວເອງຕໍ່ຫນ້າກະສັດແລະຢ່າຢືນຢູ່ໃນທີ່ໄດ້ກໍາຫນົດໄວ້ໃຫ້ຄົນໃຫຍ່ຄົນໂຕ
[7]ການທີ່ເຂົາຈະກ່າວກັບເຈົ້າວ່າ, “ເຊີນຂຶ້ນມາທີ່ນີ້,” ກໍດີກວ່າໃຫ້ເຂົາລົບລູ່ເຈົ້າຕໍ່ຫນ້າເຈົ້ານາຍ ສິ່ງທີ່ດວງຕາຂອງເຈົ້າເຫັນ.
[8]ຢ່າດ່ວນນໍາເຂົ້າມາຍັງໂຮງສານ. ເພາະເຈົ້າຈະເຮັດຢ່າງໃດໃນທີ່ສຸດ ຫາກເພື່ອນບ້ານຂອງເຈົ້າເຮັດໃຫ້ເຈົ້າຂາຍຫນ້າ?
[9]ຈົ່ງລົມເລື່ອງຂອງເຈົ້າກັບເພື່ອນບ້ານເອງ ແລະ ຢ່າເຜີຍຄວາມລັບຂອງອີກຝ່າຍຫນຶ່ງ,[10]ຫລື ເກງວ່າຜູ້ທີ່ໄດ້ຍິນຈະນໍາຄວາມອັບອາຍມາສູ່ເຈົ້າ
ແລະ ເລື່ອງບໍ່ດີກ່ຽວກັບເຈົ້າກໍຈະບໍ່ຖືກປິດງຽບຕໍ່ໄປ.
[11]ຖ້ອຍຄໍາທີ່ເວົ້າເວົ້າຖືກກາລະເທສະ ເຫມືອນຜົນແອບເປີ້ນທອງຄໍາອ້ອມດ້ວຍເງິນ.[12]ແຫວນທອງຄໍາ ຫລື
ເຄື່ອງປະດັບທອງບໍລິສຸດເປັນເຫມືອນຄໍາຕັກເຕືອນຂອງຄົນມີປັນຍາແກ່ຫູທີ່ຖ້າຟັງ.
[13]ຄວາມເຢັນຂອງຫິມະໃນລະດູກ່ຽວເປັນເຊັ່ນໃດ ຜູ້ສື່ສານທີ່ຊື່ສັດຕໍ່ບຸກຄົນເຫລົ່ານັ້ນຜູ້ທີ່ໃຊ້ເຂົາ;
ເຂົາຍ່ອມເຮັດໃຫ້ຈິດວິນຍານຂອງນາຍຊຸ່ມຊື່ນຢ່າງນັ້ນ.[14]ຄົນທີ່ອວດວ່າຈະໃຫ້ຂອງກໍານັນແຕ່ບໍ່ໄດ້ໃຫ້ ກໍເຫມືອນເມກແລະລົມທີ່ບໍ່ມີຝົນ
[15]ຄວາມອົດກັ້ນສາມາດໂນ້ມນ້າວຜູ້ຄອບຄອງໄດ້ ແລະ ລີ້ນທີ່ອ່ອນຫວານສາມາດໂນ້ມນ້າວໃຈໃຫ້ອ່ອນລົງໄດ້.
[16]ຖ້າເຈົ້າພົບນໍ້າເຜິ້ງ, ຈົ່ງກິນແຕ່ພໍດີ - ບໍ່ເຊັ່ນນັ້ນເກງວ່າເຈົ້າຈະກິນຫລາຍເກີນ, ແລະ ຮາກອອກມາ.[17]ຢ່າໄປຢ້ຽມເພື່ອນບ້ານຂອງເຈົ້າເລື້ອຍໆ,
ເກງວ່າເຂົາຈະເອືອມລະອາເຈົ້າ ແລະກຽດຊັງເຈົ້າ.
[18]ຜູ້ໃດເປັນພະຍານທີ່ຕົວະກ່າວຫາເພື່ອນບ້ານຂອງຕົນ ກໍເຫມືອນກະບອງທີ່ໃຊ້ໃນສົງຄາມ, ຫລື ດາບ, ຫລື ລູກທະນູແຫລມຄົມກໍເຊັ່ນດຽວກັນ.
[19]ການວາງໃຈຄົນບໍ່ຊື່ໃນວັນຍາກລໍາບາກ ກໍເຫມືອນແຂ້ວທີ່ພຸ ຫລື ຕີນທີ່ພິການ.
[20]ບຸກຄົນຜູ້ທີ່ຖອດເສື້ອຜ້າອອກໃນມື້ອາກາດຫນາວກໍດີ, ຫລື ເອົານໍ້າສົ້ມສາຍຊູມາລາດເທິງເກືອຂອງໂຊດາກໍດີ,
ເປັນເຫມືອນກັບຄົນທີ່ຮ້ອງເພງໃຫ້ຄົນຫນັກໃຈຟັງ.
[21]ຖ້າສັດຕູຂອງເຈົ້າຫິວ, ຈົ່ງໃຫ້ອາຫານເຂົາກິນ ແລະ ຖ້າເຂົາກະຫາຍ, ຈົ່ງໃຫ້ນໍ້າເຂົາດື່ມ,[22]ເພາະເຈົ້າຈະສຸມຖ່ານທີ່ລຸກລົງໄວ້ເທິງຫົວຂອງເຂົາ
ແລະ ພຣະຢາເວຈະກິນບໍາເຫນັດແກ່ເຈົ້າ.
[23]ລົມເຫນືອນໍາຝົນມາແບບໃດ, ລີ້ນທີ່ນິນທາລັບຫລັງກໍນໍາໃບຫນ້າບູດບຶ້ງມາແບບນັ້ນ.[24]ອາໃສຢູ່ທີ່ມູມບັນດາຟ້າ ດີກວ່າຢູ່ຮ່ວມບ້ານກັບຍິງທີ່ຈູ້ຈີ້.
[25]ຄືດັ່ງນໍ້າເຢັນທີ່ໃຫ້ແກ່ຄົນກະຫາຍແບບໃດ, ຂ່າວດີຈາກແດນໄກກໍເປັນແບບນັ້ນ.[26]ຄົນຊອບທໍາທີ່ຍອມແພ້ຄົນອະທໍາ ກໍເຫມືອນນໍ້າພຸທີ່ເປິເປື້ອນ
ຫລື ຖືກທໍາລາຍ.
[27]ກິນນໍ້າເຜິ້ງຫລາຍບໍ່ດີແບບໃດ; ກໍຄືການສະແຫວງຫາກຽດເລື້ອຍໄປກໍບໍ່ດີແບບນັ້ນ.[28]ຄົນທີ່ຄວບຄຸມຕົນເອງບໍ່ໄດ້ ກໍເຫມືອນເມືອງທີ່ຖືກທໍາລາຍ
ແລະ ບໍ່ມີກໍາແພງ.


generated on Tue Jun 17 19:01:42 2025

26 [1]ເຫມືອນດັ່ງຫິມະໃນລະດູຮ້ອນ ຫລື ຝົນໃນລະດູເກັບກ່ຽວ, ດັ່ງນັ້ນຄົນໂງ່ກໍບໍ່ຄູ່ຄວນກັບກຽດຕິຍົດ.[2]ນົກກະຈອກບິນເວີນໄປມາ ແລະ
ນົກນາງແອ່ນໂບຍບິນແບບໃດ, ຄຳແຊ່ງສາບຢ່າງບໍ່ສົມຄວນຍ່ອມບໍ່ເກີດຜົນແບບນັ້ນ.

[3]ໄມ້ແສ້ມີໄວ້ສຳລັບມ້າ ບັງຫຽນມີໄວ້ສຳລັບລາ ແລະ ໄມ້ລຽວກໍມີໄວ້ສຳລັບຫລັງຂອງພວກຄົນໂງ່.[4]ຢ່າຕອບຄົນໂງ່ຕາມຄວາມໂງ່ຂອງເຂົາ ຫລື
ເກງວ່າເຈົ້າຈະເປັນເຫມືອນເຂົາ.
[5]ຈົ່ງຕອບຄົນໂງ່ ແລະ ຮ່ວມໃນຄວາມໂງ່ຂອງເຂົາ, ເພື່ອເຂົາຈະບໍ່ກາຍເປັນຄົນມີປັນຍາໃນຄວາມຄິດຂອງເຂົາເອງ.
[6]ຜູ້ໃດກໍຕາມທີ່ສົ່ງຂ່າວໄປດ້ວຍມືຂອງຄົນໂງ່ ກໍເຫມືອນຕັດຕີນທັງສອງຂ້າງອອກ ແລະ ດື່ມຄວາມຮຸນແຮງ.
[7]ເຫມືອນດັ່ງຂາທັງສອງຂ້າງຂອງຄົນພິການທີ່ຫ້ອຍຢູ່ແບບໃດ ສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ກໍເປັນແບບນັ້ນ.[8]ຜູ້ທີ່ໃຫ້ກຽດຄົນໂງ່
ກໍເຫມືອນຄົນທີ່ມັດກ້ອນຫີນໄວ້ກັບກະຖຸນ.
[9]ຕົ້ນຫນາມຢູ່ໃນມືຄົນຂີ້ເມົາໄຮ້ປະໂຫຍດແບບໃດ ສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ກໍເປັນແບບນັ້ນ.[10]ຜູ້ທີ່ຈ້າງຄົນໂງ່ ຫລື
ໃຜກໍຕາມຄົນທີ່ຜ່ານໄປມາ ກໍເຫມືອນນັກທະນູທີ່ຍິງຄົນເຫລົ່ານັ້ນທຸກຄົນທີ່ຢູ່ຮອບເຂົາບາດເຈັບ.
[11]ຫມາທີ່ກັບໄປຫາສິ່ງທີ່ມັນຮາກອອກມາ, ກໍເຫມືອນຄົນໂງ່ທີ່ເຮັດຄວາມໂງ່ຊ້ຳແລ້ວຊ້ຳອີກ.[12]ເຈົ້າເຫັນຄົນບາງຄົນທີ່ຄິດວ່າຕົວເອງມີປັນຍາຫລືບໍ່?
ຍັງມີຄວາມຫວັງໃນຄົນໂງ່ຫລາຍກວ່າໃນເຂົາອີກ.
[13]ຄົນກຽດຄ້ານເວົ້າວ່າ, “ມີສິງໂຕຢູ່ທີ່ຫົນທາງ! ມີສິງໂຕຢູ່ທີ່ລານເມືອງ!”[14]ປະຕູຫັນໄປມາດ້ວຍບານພັບຂອງມັນແບບໃດ,
ດັ່ງນັ້ນຄົນກຽດຄ້ານກໍເຮັດຢ່າງນັ້ນເທິງທີ່ນອນຂອງເຂົາແບບນັ້ນ.
[15]ບຸກຄົນທີ່ກຽດຄ້ານຝັງມືຂອງຕົນໃນຊາມ ແລະ ເຂົາເຫມື່ອຍທີ່ຈະເອົາມືກັບມາທີ່ປາກຂອງຕົນ.
[16]ບຸກຄົນທີ່ກຽດຄ້ານເຫັນວ່າຕົນເອງມີປັນຍາຫລາຍກວ່າ ຄົນເຈັດຄົນທີ່ສະຫລາດສຸຂຸມ.
[17]ຄົນທີ່ຜ່ານມາແລ້ວໄປມີອາລົມໂກດກັບການຖຽງກັນ, ຊຶ່ງບໍ່ແມ່ນເລື່ອງຂອງເຂົາ ກໍເຫມືອນຄົນດຶງຫູທັງສອງຂ້າງຂອງຫມາ.
[18]ຄົນບ້າທີ່ຍິງລູກທະນູໄຟອອກໄປແບບໃດ,[19]ກໍຄືຄົນທີ່ລໍ້ລວງເພື່ອນບ້ານຂອງຕົນ ແລະກ່າວວ່າ, “ຂ້ານ້ອຍກຳລັງເລົ່າເລື່ອງຕະລົກບໍ່ແມ່ນບໍ?”
[20]ເພາະຂາດຟືນ, ໄຟກໍດັບ; ແລະ ທີ່ໃດບໍ່ມີຄົນຊຸມຊິບນິນທາ ການຜິດຖຽງກັນກໍຢຸດໄປ.[21]ຖ່ານເປັນເຊື້ອເພີງ ແລະ ຟືນເປັນເຊື້ອໄຟແບບໃດ,
ຄົນທີ່ມັກຜິດຖຽງກັນກໍເປັນເຫດໃຫ້ການຜິດຖຽງລຸກລາມແບບນັ້ນ.
[22]ຖ້ອຍຄຳຂອງຜູ້ຊຸບຊິບນິນທາກໍເຫມືອນຊີ້ນອາຫານແຊບ; ມັນລົງໄປຍັງສ່ວນຕ່າງໆໃນຮ່າງກາຍ.[23]ປາກທີ່ເຜັດຮ້ອນ ແລະ
ໃຈຊົ່ວກໍເຫມືອນການເຄືອບເງົາຢູ່ເທິງຫມໍ້ດິນ.
[24]ຄົນທີ່ກຽດຊັງຜູ້ອື່ນກໍກົບເກື່ອນຄວາມຮູ້ສຶກຂອງເຂົາດ້ວຍຮີມຝີປາກຂອງເຂົາ ແລະ ເຂົາເກັບການຫລອກລວງໄວ້ພາຍໃນໃຈເຂົາ.
[25]ເມື່ອເຂົາເວົ້າເຫມືອນເມດຕາຈິດ, ກໍຢ່າເຊື່ອເຂົາ ເພາະມີສິ່ງຫນ້າລັງກຽດເຈັດຢ່າງໃນໃຈເຂົາ.[26]ເຖິງເຂົາຈະປົກປິດຄວາມກຽດຊັງໄວ້ດ້ວຍເລ່
ແຕ່ຄວາມຊົ່ວຂອງເຂົາຈະຖືກເປີດໂປງໃນທີ່ປະຊຸມ.
[27]ຄົນທີ່ກິ້ງກ້ອນຫີນຂຶ້ນໄປ ມັນຈະກິ້ງກັບມາທັບເຂົາເອງ.[28]ລີ້ນຂີ້ຕົວະ ກຽດຊັງປະຊາຊົນທີ່ມັນທຳລາຍ ແລະ
ປາກທີ່ປະຈົບປະແຈງກໍນຳຄວາມພິນາດມາໃຫ້.


generated on Tue Jun 17 19:01:42 2025

27 [1]ຢ່າເວົ້າອວດເຖິງມື້ອື່ນ, ເພາະເຈົ້າບໍ່ຮູ້ວ່າມື້ຫນຶ່ງໆຈະນຳຫຍັງມາໃຫ້ແນ່.[2]ຈົ່ງໃຫ້ຄົນອື່ນສັນລະເສີນເຈົ້າ ແລະ
ບໍ່ແມ່ນປາກຂອງເຈົ້າເອງໃຫ້ຄົນຕ່າງດ້າວສັນລະເສີນ; ແລະ ບໍ່ແມ່ນຮີມຝີປາກຂອງເຈົ້າເອງ.

[3]ຈົ່ງພິຈາລະນາເບິ່ງຄວາມຫນັກຂອງຫີນ ແລະ ນ້ຳຫນັກຂອງຊາຍ - ແຕ່ການຍົວະຍົງຂອງຄົນໂງ່ກໍຫນັກກວ່າທັງສອງຢ່າງນັ້ນ.
[4]ຄວາມໃຈຮ້າຍກໍດຸຮ້າຍ ແລະ ຄວາມໂກດຮ້າຍກໍຖ້ວມທົ່ນ, ແຕ່ໃຜຈະຢືນຢູ່ຕໍ່ຫນ້າຄວາມອິດສາໄດ້?
[5]ຕຳຫນິກັນຕໍ່ຫນ້າ ດີກວ່າຮັກທີ່ບໍ່ສະແດງອອກ.[6]ບາດແຜທີ່ເກີດເພາະເພື່ອນມິດກໍເຊື່ອໃຈໄດ້,
ແຕ່ການຈູບຂອງສັດຕູນັ້ນຫລາຍເກີນຄວາມເປັນຈິງ.
[7]ຄົນທີ່ອີ່ມແລ້ວຍ່ອມປະຕິເສດແມ່ນແຕ່ນ້ຳເຜິ້ງ, ແຕ່ສຳລັບບຸກຄົນທີ່ຫິວ, ທຸກສິ່ງທີ່ຂົມກໍກັບຫວານ.[8]ຄົນທີ່ເລາະຈາກບ້ານຂອງຕົນ
ກໍເຫມືອນນົກທີ່ເລາະຈາກຮັງຂອງມັນ.
[9]ນ້ຳຫອມ ແລະ ເຄື່ອງຫອມເຮັດໃຫ້ໃຈຍິນດີ, ແຕ່ຄວາມອ່ອນຫວານຂອງເພື່ອນມາຈາກຄຳແນະນຳທີ່ຈິງໃຈ.[10]ຢ່າຖິ້ມເພື່ອນຂອງເຈົ້າ ແລະ
ເພື່ອນຂອງພໍ່ເຈົ້າ, ແລະ ຢ່າໄປທີ່ບ້ານພີ່ນ້ອງຂອງເຈົ້າໃນວັນທີ່ເຈົ້າພົບຄວາມຫາຍະນະ. ເພື່ອນບ້ານທີ່ຢູ່ໃກ້ ດີກວ່າພີ່ນ້ອງທີ່ຢູ່ໄກ.
[11]ລູກຊາຍຂອງເຮົາເອີຍ, ຈົ່ງມີປັນຍາ, ແລະຈົ່ງເຮັດໃຫ້ໃຈຂອງເຮົາຍິນດີ; ແລ້ວເຮົາຈະຕອບຄົນທີ່ຕຳຫນິເຮົາໄດ້.[12]ຄົນທີ່ສຸຂຸມເຫັນອັນຕະລາຍ
ແລະ ເຊື່ອງຕົວ, ແຕ່ຄົນຮູ້ນ້ອຍຍ່າງເລື້ອຍໄປ ແລະ ເປັນທຸກເພາະສິ່ງນັ້ນ.
[13]ຈົ່ງຮິບເສື້ອຜ້າຂອງຜູ້ທີ່ຄ້ຳປະກັນໃຫ້ຄົນແປກຫນ້າ, ແລະ ຈົ່ງຍຶດມັນໄວ້ ເມື່ອເຂົາປະກັນໃຫ້ຜູ້ຍິງຫລາຍໃຈ.
[14]ຄົນທີ່ຕື່ນແຕ່ເຊົ້າມືດໄປອວຍພອນເພື່ອນບ້ານດ້ວຍສຽງດັງ, ຄຳອວຍນັ້ນຈະກາຍເປັນຄຳສາບແຊ່ງ!
[15]ຍາດຝົນຍົດລົງມາບໍ່ຢຸດໃນວັນຝົນຕົກພຳແບບໃດ ເມຍຂີ້ຜິດຖຽງກໍເຫມືອນກັນແບບນັ້ນ;[16]ການຫ້າມນາງກໍເຫມືອນຫ້າມລົມ
ຫລືພະຍາຍາມຈັບນ້ຳມັນດ້ວຍມືຂວາ.
[17]ເຫລັກຝົນເຫລັກໃຫ້ຄົມໄດ້ແບບໃດ; ຄົນຫນຶ່ງກໍລັບເພື່ອນຂອງຕົນໃຫ້ແຫລມຄົມໄດ້ແບບນັ້ນ.
[18]ຄົນທີ່ດູແລຕົ້ນຫມາກເດື່ອຈະໄດ້ກິນຜົນຂອງມັນ, ແລະ ຄົນທີ່ຄຸ້ມກັນນາຍຂອງຕົນຈະໄດ້ຮັບກຽດ.
[19]ສະທ້ອນຫນ້າຄົນແບບໃດ ໃຈຂອງຄົນກໍສະທ້ອນເຖິງບຸກຄົນແບບນັ້ນ.[20]ແດນຄົນຕາຍ ແລະ ແດນມໍລະນາບໍ່ຮູ້ຈັກອີ່ມ,
ດັ່ງນັ້ນດວງຕາຂອງຄົນເຮົາກໍບໍ່ຮູ້ພໍໃຈ.
[21]ໄຟອັນມີໄວ້ອ້ອມເງິນ ແລະ ເຕົາຖະລຸງມີໄວ້ຖະລຸງທອງຄຳ; ແລ ະບຸກຄົນຈະພິສູດໄດ້ໂດຍຄຳຍົກຍ້ອງທີ່ເຂົາໄດ້ຮັບ.
[22]ເອົາຄົນໂງ່ໃສ່ຄົກຕຳດ້ວຍສາກ - ພ້ອມກັບເມັດເຂົ້າ ຄົນໂງ່ກໍຍັງໂງ່ຢູ່ນັ້ນເອງ.
[23]ຈົ່ງແນ່ໃຈເຈົ້າຮູ້ຄວາມທຸກສຸກຂອງຝູງແພະແກະຂອງເຈົ້າ ແລະ ຈົ່ງເອົາໃຈໃສ່ຝູງສັດຂອງເຈົ້າ,[24]ເພາະຄວາມມັ່ງມີບໍ່ຍັງຍືນຢູ່ເປັນນິດ
ມົງກຸດຈະບໍ່ຄົງທົນຢູ່ທຸກຊົ່ວຊາດແມ່ນບໍ່?[25]ເມື່ອເຂົາເກັບຫຍ້າແຫ້ງໄປແລ້ວ, ຫຍ້າໃຫມ່ກໍປາກົດຂຶ້ນ, ແລ້ວຫຍ້າຕາມພູເຂົາຕ່າງໆ
ກໍຖືກເກັບຮວບຮວມມາເພື່ອໃຫ້ຝູງສັດ.
[26]ເມື່ອນັ້ນລູກແກະຈະໃຫ້ເສື້ອຜ້າແກ່ເຈົ້າແລະ ແພະກໍຈະເປັນຄ່ານາ.[27]ຈະມີນົມແພະພໍເປັນອາຫານແກ່ເຈົ້າ - ເປັນອາຫານແກ່ຄອບຄົວຂອງເຈົ້າ
- ແລະ ເປັນເຄື່ອງຍັງຊີບແກ່ບັນດາສາວໃຊ້ຂອງເຈົ້າ.

28 [1]ປະຊາຊົນທີ່ອະທຳແລ່ນຫນີແມ່ນບໍ່ມີໃຜໄລ່ຕາມ, ແຕ່ປະຊາຊົນຜູ້ຊອບທຳຈະກ້າຫານຢ່າງສິງຫນຸ່ມ.
[2]ເມື່ອແຜ່ນດິນເກີດການລະເມີດປັ່ນປ່ວນ, ກໍມີຜູ້ຄອບຄອງຫລາຍຄົນ, ແຕ່ໂດຍອາໄສຄົນທີ່ມີຄວາມເຂົ້າໃຈແລະຄວາມຮູ້,
ແຜ່ນດິນນັ້ນຈະຍືນຍົງ.

[3]ບຸກຄົນຍາກຈົນທີ່ຂົ່ມເຫັງປະຊາຊົນທີ່ຍາກຈົນກໍເຫມືອນຝົນທີ່ຊັດລົງມາທຳລາຍພືດຜົນຈົນບໍ່ມີຫຍັງຈະກິນ.
[4]ຄົນເຫລົ່ານັ້ນທີ່ລະຖິ້ມກົດບັນຍັດຍ່ອມສັນລະເສີນປະຊາຊົນທີ່ຊົ່ວຊ້າ, ແຕ່ຄົນເຫລົ່ານັ້ນທີ່ຮັກສາກົດບັນຍັດຍ່ອມຕໍ່ສູ້ພວກເຂົາ.
[5]ຄົນຊົ່ວຮ້າຍບໍ່ຮູ້ວ່າຄວາມຍຸດຕິທຳເປັນຢ່າໃດ, ແຕ່ຄົນທີ່ສະແຫວງຫາພຣະຢາເວຈະເຂົ້າໃຈທຸກສິ່ງ.
[6]ບຸກຄົນຍາກຈົນທີ່ດຳເນີນໃນຄວາມຊື່ສັດຂອງເຂົາ, ກໍດີກວ່າບຸກຄົນມັ່ງມີທີ່ຄົດໂກງໃນທາງຂອງເຂົາ.
[7]ຄົນທີ່ຮັກສາກົດບັນຍັດກໍເປັນລູກຊາຍທີ່ມີຄວາມເຂົ້າໃຈ, ແຕ່ເພື່ອນຂອງຄົນຕະກະເຮັດໃຫ້ພໍ່ຂອງເຂົາຂາຍຫນ້າ.
[8]ຄົນທີ່ມີຊັບສົມບັດຂອງເຂົາດ້ວຍການຂູດຮີດດອກເບ້ຍ ກໍໄດ້ຮວບຮວມຊັບນັ້ນໄວ້ໃຫ້ຜູ້ທີ່ເມດຕາປະຊາຊົນທີ່ຍາກຈົນ.
[9]ຖ້າຜູ້ໃດຫັນຫູຂອງເຂົາບໍ່ຟັງກົດບັນຍັດ, ແມ່ນຄຳອະທິຖານຂອງເຂົາກໍເປັນທີ່ຫນ້າລັງກຽດ.[10]ຄົນທີ່ນຳຄົນທ່ຽງທຳຫລົງເຂົ້າໄປໃນທາງຊົ່ວ
ກໍຈະຕົກລົງໃນຫລຸມຂອງເຂົາເອງ, ແຕ່ຄົນດີພ້ອມຈະໄດ້ຮັບສິ່ງດີເປັນມໍລະດົກ.
[11]ບຸກຄົນທີ່ມັ່ງມີອາດມີປັນຍາໃນສາຍຕາຂອງຕົນເອງ, ແຕ່ບຸກຄົນທີ່ຍາກຈົນຜູ້ມີຄວາມເຂົ້າໃຈຈະຮູ້ຈັກຕົວເຂົາຊັດເຈນ.
[12]ເມື່ອປະຊາຊົນທີ່ມັກຄວາມປິຕິຍິນດີ, ຄວາມຮຸ່ງເຮືອງກໍມີຫລາຍຂຶ້ນ, ແຕ່ເມື່ອຄົນອະທຳມີອຳນາດ ປະຊາຊົນກໍເຊື່ອງຕົວ.
[13]ຜູ້ທີ່ປົກປິດຄວາມບາບຂອງເຂົາໄວ້ຈະບໍ່ຈະເລີນ, ແຕ່ຜູ້ສາລະພາບແລະຖິ້ມມັນຈະໄດ້ຄວາມກາລຸນາ.
[14]ຄົນທີ່ດຳເນີນຊີວິດດ້ວຍຄວາມຢຳເກງພຣະເຈົ້າຢູ່ສະເຫມີກໍເປັນສຸກ, ແຕ່ຄົນທີ່ເຮັດໃຈຂອງເຂົາໃຫ້ແຂງກະດ້າງຈະຕົກໃນຄວາມຍາກລຳບາກ.
[15]ຄົນອະທຳທີ່ປົກຄອງປະຊາຊົນຜູ້ຍາກຈົນ ກໍເຫມືອນສິງໂຕຄຳລາມຫລືຫມີໂດດໃສ່ເຫຍື່ອ.
[16]ຜູ້ຄອບຄອງທີ່ຂາດຄວາມເຂົ້າໃຈກໍເປັນຄົນກົດຂີ່ຂົ່ມເຫັງຕົວສະກາດ, ແຕ່ຄົນທີ່ກຽດຊັງສິ່ງທີ່ໄດ້ມາໂດຍບໍ່ຊອບທຳຍ່ອມມີຊີວິດຍືນຍາວ.
[17]ຄົນທີ່ມີຄວາມຜິດໃນເລືອງໂລຫິດຂອງຄົນອື່ນ, ເຂົາຈະຫລົບຫນີໄປຈົນຕາຍ ແລະບໍ່ມີໃຜຊ່ວຍເຂົາເລີຍ.
[18]ບຸກຄົນໃດທີ່ດຳເນີນຊີວິດຢ່າງໄຮ້ຕຳນິຈະໄດ້ຮັບການຊ່ວຍກູ້, ແຕ່ຄົນຄົດໂກງໃນທາງຂອງເຂົາຈະລົ້ມລົງທັນທີ.
[19]ຄົນທີ່ມຸ່ງເຮັດວຽກໃນທີ່ດິນຂອງເຂົາຈະມີອາຫານພຽງພໍ, ແຕ່ຄົນທີ່ແລ່ນຕາມສິ່ງໄຮ້ສາລະຈະຍິ່ງຍາກຈົນ.
[20]ຄົນຊື່ສັດຈະໄດ້ຮັບພຣະພອນຫລວງຫລາຍ, ແຕ່ຄົນທີ່ຮີບເລັ່ງລວຍທາງລັດຈະຖືກລົງໂທດ.
[21]ການລຳອຽງນັ້ນບໍ່ດີ, ແຕ່ພຽງແຕ່ອາຫານຕ່ອນຫນຶ່ງກໍເຮັດໃຫ້ຄົນອາດເຮັດຜິດໄດ້.[22]ຄົນຕະກະນີເລັ່ງຫາຊັບສົມບັດ,
ແຕ່ບໍ່ຮູ້ວ່າຄວາມຂັດສົນຈະມາເຖິງເຂົາ.
[23]ຜູ້ໃດກໍຕາມຕັກເຕືອນຄົນອື່ນ, ຈະໄດ້ຮັບຄວາມໂປດປານພາຍຫລັງ ຫລາຍກວ່າ ຜູ້ທີ່ໃຊ້ລີ້ນປະຈົບປະແຈງ.
[24]ຄົນທີ່ຂີ້ລັກຊັບຂອງພໍ່ຫລືແມ່ຂອງຕົນ ແລະເວົ້າວ່າ, “ຢ່າງນີ້ບໍ່ຜິດ” ເຂົາກໍເປັນເພື່ອນຂອງນັກທຳລາຍ.
[25]ຄົນໂລບປຸກປັ່ນໃຫ້ເກີດການຜິດຖຽງ, ແຕ່ຜູ້ທີ່ວາງໃຈໃນພຣະຢາເວຈະເລີນຮຸ່ງເຮືອງ.
[26]ຄົນທີ່ເຊື່ອໃຈຕົງເອງເປັນຄົນໂງ່ແຕ່ຄົນທີ່ດຳເນີນຊີວິດຢ່າງມີປັນຍາຈະປອດໄພ.
[27]ຜູ້ທີ່ໃຫ້ແກ່ຄົນຍາກຈົນຈະບໍ່ຂັດສົນ, ແຕ່ຜູ້ໃດກໍຕາມທີ່ເພີກເສີຍຈະຖືກແຊ່ງສາບຫລາຍ.
[28]ເມື່ອປະຊາຊົນທີ່ອະທຳມີອຳນາດຄົນທັງຫລາຍກໍເຊື່ອງຕົວ, ແຕ່ເມື່ອເຂົາທັງຫລາຍພິນາດໄປ ປະຊາຊົນຜູ້ຊອບທຳກໍເພີ່ມຂຶ້ນ,

 generated on Tue Jun 17 19:01:42 2025

29 [1]ບຸກຄົນທີ່ຖືກຕັກເຕືອນເລື້ອຍໆ ແຕ່ຍັງຫົວດື້ຈະຖືກທຳລາຍທັນທີໂດຍບໍ່ມີທາງແກ້ໄຂ້.[2]ເມື່ອປະຊາຊົນຜູ້ຊອບທຳທະວີເພີ່ມຂຶ້ນ,
ປະຊາຊົນກໍປິຕິຍິນດີ, ແຕ່ເມື່ອບຸກຄົນທີ່ອະທຳປົກຄອງ ປະຊາຊົນກໍຄ່ຳຄວນ.

[3]ຜູ້ໃດທີ່ຮັກປັນຍາຍ່ອມເຮັດໃຫ້ພໍ່ຂອງຕົນປິຕິຍິນດີ, ແຕ່ຜູ້ທີ່ຄົບຫາຍິງໂສເພນີກໍຈ່າຍຊັບຈົນຫມົດສິ້ນ.
[4]ກະສັດຊົງເຮັດໃຫ້ບ້ານເມືອງເປັນປຶກແຜ່ນດ້ວຍຄວາມຍຸດຕິທຳ, ແຕ່ຄົນທີ່ຮັບສິນບົນເຮັດໃຫ້ມັນຈົມລົງ.
[5]ຄົນທີ່ປະຈົບປະແຈງເພື່ອນບ້ານຂອງຕົນ ຍ່ອມກາງຕາຂ່າຍໄວ້ດັກຕີນຂອງເຂົາ.[6]ໃນຄວາມບາບຂອງບຸກຄົນຊົ່ວຕື່ກັບດັກ,
ແຕ່ບຸກຄົນຜູ້ຊອບທຳຮ້ອງເພງແລະປິຕິຍິນດີ.
[7]ບຸກຄົນຜູ້ຊອບທຳຮຽກຮ້ອງກ່ຽວກັບປະຊາຊົນທີ່ຍາກຈົນ; ບຸກຄົນອະທຳບໍ່ເຂົ້າໃຈຄວາມຮູ້ແບບນີ້.
[8]ຄົນມັກເຢາະເຢີ້ຍເຮັດໃຫ້ບ້ານເມືອງລຸກເປັນໄຟ, ແຕ່ຄົນມີປັນຍາເຮັດໃຫ້ຄວາມໂກດຮ້າຍສະຫງົບລົງ.
[9]ຖ້າຄົນມີປັນຍາມີເລື່ອງໂຕ້ຖຽງກັບຄົນໂງ່, ຄົນໂງ່ຈ້າກໍເດືອດ, ເຂົາທັງຫົວຂວັນແລະບໍ່ມີຄວາມສະຫງົບ.
[10]ພວກກະຫາຍເລືອດຍ່ອມກຽດຊັງຄົນດີພ້ອມ ແລະສະແຫວງຫາຊີວິດຂອງຄົນອື່ນຊື່ຕົງ.
[11]ຄົນໂງ່ລະບາຍຄວາມໂກດຮ້າຍອອກມາເຕັມທີ່, ແຕ່ຄົນມີປັນຍາຍ່ອມຢັບຢັ້ງໄວ້.[12]ຖ້າຜູ້ຄອບຄອງໃສ່ໃຈຄຳເວົ້າຂີ້ຕົວະ
ຂ້າຣາຊການທັງສິ້ນຂອງເຂົາກໍຖ້າເປັນຄົນອາທຳ.
[13]ບຸກຄົນຍາກຈົນແລະຜູ້ກົດຂີ່ເຫມືອນກັນຢູ່ຢ່າງຫນຶ່ງ, ຄືພຣະຢາເວປະທານຄວາມສະຫວ່າງແກ່ດວງຕາຂອງຄົນທັງສອງ.
[14]ຖ້າກະສັດຊົງພິພາກສາຄົນຈົນດ້ວຍຄວາມຈິງ, ພະທີ່ນັ່ງຂອງພະອົງຈະຕັ້ງຢູ່ເປັນນິດ.
[15]ໄມ້ແສ້ແລະຄຳຕັກເຕືອນໃຫ້ປັນຍາແກ່ເດັກທີ່ຖືກປ່ອຍປະລະເລີຍ, ແຕ່ຈະນຳຄວາມອັບອາຍມາສູ່ແມ່.[16]ເມື່ອປະຊາຊົນອະທຳເພີ່ມອຳນາດ,
ການທໍລະຍົດກໍເພີ່ມຂຶ້ນ, ແຕ່ປະຊາຊົນຜູ້ຊອບທຳຈະເຫັນຄວາມລົ້ມຈົມຂອງຄົນອະທຳເຫລົ່ານັ້ນ.
[17]ຈົ່ງຕີສອນລູກຊາຍຂອງເຈົ້າ ແລະເຂົາຈະໃຫ້ເຈົ້າສະບາຍໃຈ, ເຂົາຈະໃຫ້ຄວາມປິຕິຍິນດີແກ່ເຈົ້າ.
[18]ໃນບ່ອນທີ່ບໍ່ມີການເຜີຍນິມິດປະຊາຊົນກໍປ່ອຍຕົວ, ແຕ່ຄົນທີ່ຮັກສາກົດບັນຍັດຍ່ອມເປັນສຸກ.
[19]ຄົນຮັບໃຊ້ຈະຮັບການສັ່ງສອນດ້ວຍຄຳເວົ້າເທົ່ານັ້ນບໍ່ໄດ້, ເພາະແມ່ນເຂົາຈະເຂົ້າໃຈ ແຕ່ເຂົາກໍບໍ່ເຊື່ອຟັງ.[20]ເຈົ້າເຫັນຄົນປາກໄວບໍ່?
ຍັງມີຄວາມຫວັງໃນຄົນໂງ່ຫລາຍກວ່າເຂົາອີກ.
[21]ຄົນທີ່ຕາມໃຈຄົນຮັບໃຊ້ຂອງຕົນຕັ້ງແຕ່ນ້ອຍໆ, ໃນທີ່ສຸດຈະພົບວ່າເຂົານຳຄວາມຍຸ່ງຍາກມາໃຫ້.
[22]ບຸກຄົນຂີ້ໃຈຮ້າຍເລັ່ງເລົ້າໃຫ້ເກີດການຜິດຖຽງ ແລະຄົນເຈົ້າອາລົມກໍເຮັດໃຫ້ເກີດການເຮັດບາບຫລວງຫລາຍ.
[23]ຄວາມຍິ່ງຂອງບຸກຄົນນຳເຂົາໃຫ້ຕ່ຳລົງ, ແຕ່ຄົນຖ່ອມຕົວຈະໄດ້ຮັບກຽດ.[24]ຜູ້ສົມຄົບກັບຂີ້ລັກຍ່ອມກຽດຊັງຊີວິດຂອງເຂົາ,
ເຂົາໄດ້ຍິນຄຳສາບແຊ່ງ ແຕ່ບໍ່ເວົ້າຫຍັງເລີຍ.
[25]ຄວາມຢ້ານກົວຂອງຄົນເຮັດໃຫ້ມີການວາງບ້ວງໄວ້, ແຕ່ຄົນທີ່ວາງໃຈໃນພຣະຢາເວກໍປອດໄພ.
[26]ຄົນຫລວງຫລາຍສະແຫວງຫາຄວາມພໍໃຈຈາກຜູ້ຄອບຄອງ, ແຕ່ບຸກຄົນຈະໄດ້ຮັບຄວາມຍຸດຕິທຳຈາກພຣະຢາເວ.
[27]ຄົນອະຍຸດຕິທຳເປັນທີ່ລັງກຽດແກ່ຄົນຊອບທຳ, ແຕ່ຄົນຊື່ຕົງກໍເປັນທີ່ລັງກຽດແກ່ຄົນອະທຳ.


generated on Tue Jun 17 19:01:42 2025

30 [1]ຖ້ອຍຄຳທັງຫລາຍຂອງອາກູລູກຂອງຢາເກ ຜູ້ຊາຍຄົນນັ້ນໄດ້ເຮັດຕໍ່ອີທີເອນ, ກັບອີທີເອນແລະອູສານວ່າ:[2]ຂ້າແດ່ພຣະເຈົ້າ
ຂ້ານ້ອຍອ່ອນເພຍແລະຫມົດກຳລັງ ເພາະຂ້ານ້ອຍກໍໂງ່ເກີນກວ່າຈະເປັນຄົນ.[3]ແລະຂ້ານ້ອຍບໍ່ມີຄວາມຮອບຮູ້ຢ່າງມະນຸດ,
ແລະຂ້ານ້ອຍບໍ່ເຄີຍຮຽນຮູ້ປັນຍາ ທັງບໍ່ມີຄວາມຮູ້ກ່ຽວກັບອົງບໍລິສຸດ.

[4]ໃຜໄດ້ຂຶ້ນສະຫວັນແລະລົງມາ? ໃຜລວບລວມລົມໄວ້ໃນມືທັງສອງຂ້າງຂອງເຂົາ? ໃຜເອົາເສື້ອຜ້າຫໍ່ນ້ຳໄວ້?
ໃຜສະຖາປະນາທີ່ສຸດປາຍແຫ່ງແຜ່ນດິນໂລກ? ຜູ້ນັ້ນຊື່ຫຍັງ? ແລະລູກຂອງຜູ້ນັ້ນຊື່ຫຍັງ? ພວກທ່ານຈະຕ້ອງຮູ້ແນ່.
[5]ທຸກຖ້ອຍຄຳຂອງພຣະເຈົ້າພິສູດແລ້ວວ່າຈິງ, ພຣະອົງຊົງເປັນໂລ້ແກ່ຜູ້ລີ້ໄພໃນພຣະອົງ.[6]ຢ່າເພີ່ມຫຍັງເຂົ້າກັບຖ້ອຍຄຳຂອງພຣະອົງ,
ເກງວ່າພຣະອົງຈະຊົງລົງໂທດພວກເຈົ້າ, ແລະຊົງຕັດສິນວ່າພວກເຈົ້າເວົ້າຕົວະ.
[7]ຂໍພຣະອົງຊ່ວຍໃຫ້ຂ້ານ້ອຍ, ມີສອງຢ່າງກ່ອນຂ້ານ້ອຍຕາຍ.[8]ຂໍໃຫ້ຄວາມບໍ່ຈິງແລະຄຳຕົວະໄກຈາກຂ້ານ້ອຍ,
ຂໍຢ່າປະທານຄວາມຍາກຈົນຫລືຄວາມຮັ່ງມີແກ່ຂ້ານ້ອຍ, ຂໍພຽງປະທານອາຫານທີ່ຈຳເປັນແກ່ຂ້ານ້ອຍ.[9]ເພາະຖ້າຂ້ານ້ອຍມີຫລາຍເກີນໄປ,
ຂ້ານ້ອຍອາດຈະປະຕິເສດພຣະອົງ, ແລະປະຕິເສດພຣະອົງ ແລ້ວເວົ້າວ່າ “ພຣະຢາເວເປັນໃຜ?” ຫລືຖ້າຂ້ານ້ອຍຍາກຈົນ, ຂ້ານ້ອຍອາດຈະລັກ
ແລະລົບລູ່ພຣະນາມພຣະເຈົ້າຂອງຂ້ານ້ອຍ.
[10]ຢ່າກ່າວຮ້າຍຄົນຮັບໃຊ້ໃຫ້ນາຍຂອງເຂົາຟັງ, ເກງວ່າເຂົາຈະແຊ່ງເຈົ້າແລະເຈົ້າຈະຕ້ອງຮັບໂທດ.
[11]ມີຄົນທີ່ແຊ່ງພໍ່ຂອງພວກເຂົາ ແລະບໍ່ອວຍພອນແມ່ຂອງພວກເຂົາ.[12]ມີຄົນທີ່ຄິດວ່າຕົນເອງບໍລິສຸດໃນສາຍຕາຂອງພວກເຂົາ,
ແຕ່ບໍ່ໄດ້ຮັບການຊຳລະຄວາມເປິເປື້ອນຂອງພວກເຂົາ.
[13]ມີຄົນທີ່ດວງຕາສະແດງຄວາມຍິ່ງ, ແລະຫນັງຕາສະແດງຄວາມຖືດີ![14]ມີຄົນທີ່ແຂ້ວຂອງເຂົາເປັນດາບ, ແລະແຂ້ວກາມຂອງເຂົາເປັນມີດ,
ເພື່ອຈະທຳລາຍຄົນຍາກຈົນຈາກແຜ່ນດິນໂລກ ແລະຄົນຂັດສົນຈາກມະນຸດ.
[15]ພວກມັນຮ້ອງວ່າ “ເອົາມາ ເອົາມາ” ມີສາມສິ່ງທີ່ບໍ່ເຄີຍອີ່ມສີ່ສິ່ງທີ່ບໍ່ເຄີຍເວົ້າວ່າ, “ພໍແລ້ວ”:[16]ຄືແດນຄົນຕາຍ, ທ້ອງຂອງຍິງຫມັນ;
ແຜ່ນດິນທີ່ບໍ່ອີ່ມນ້ຳ; ແລະໄຟທີ່ບໍ່ເຄີຍເວົ້າວ່າ, “ພໍແລ້ວ”[17]ດວງຕາທີ່ເຢາະເຢີ້ຍພໍ່ ແລະດູຫມິ່ນບໍ່ຟັງແມ່, ຈະຖືກຝູງກາແຫ່ງຫຸບເຂົາຈິກອອກໄປ,
ແລະລູກນົກແຮ້ງຈະກິນ.
[18]ມີສາມສິ່ງທີ່ປະຫລາດລ້ຳສຳລັບຂ້ານ້ອຍ, ສີ່ສິ່ງທີ່ຂ້ານ້ອຍບໍ່ເຂົ້າໃຈຄື:[19]ທ່າທາງຂອງນົກອິນຊີເທິງທ້ອງຟ້າ; ທ່າທາງຂອງງູເທິງຫີນ;
ທ່າທາງຂອງເຮືອໃນທ້ອງທະເລ; ແລະທ່າທາງຂອງຊາຍຫນຸ່ມຕໍ່ຍິງສາວ.
[20]ນີ້ເປັນທ່າທາງຂອງຍິງຜູ້ລ່ວງປະເວນີຄື: ນາງກິນ ແລະນາງເຊັດປາກແລະນາງເວົ້າວ່າ, “ຂ້ອຍບໍ່ໄດ້ເຮັດຊົ່ວ.”
[21]ແຜ່ນດິນສະເທືອນພາຍໃຕ້ສາມສິ່ງ, ແລະມັນບໍ່ອາດທົນຢູ່ໃຕ້ສີ່ສິ່ງ:[22]ຄື ທາດເມື່ອໄດ້ເປັນກະສັດ; ຄົນໂງ່ຈ້າເມື່ອກິນອີ່ມ;
[23]ຍິງທີ່ເປັນທີ່ກຽດຊັງເມື່ອໄດ້ແຕ່ງງານ; ແລະສາວໃຊ້ເມື່ອຂຶ້ນມາແທນທີ່ນາຍຍິງຂອງຕົນ.
[24]ມີສີ່ສິ່ງໃນໂລກທີ່ນ້ອຍ ແຕ່ມີປັນຍາຫລາຍເຫລືອລົ້ນ:[25]ມົດ ເປັນສິ່ງມີຊີວິດທີ່ບໍ່ແຂງແຮງ, ແຕ່ມັນຍັງຕຽມອາຫານຂອງມັນໄວ້ໃນລະດູແລ້ງ;
[26]ຕົວຕຸ່ນ ເປັນສິ່ງມີຊີວິດທີ່ບໍ່ມີກຳລັງ, ແຕ່ພວກມັນຍັງສ້າງບ້ານຂອງພວກມັນໃນຊອກຫີນ.
[27]ຕັກແຕນທະເລຊາຍບໍ່ມີກະສັດ, ແຕ່ມັນທັງຫມົດຍັງຍ່າງຂະບວນເປັນແຖວ.[28]ຂີ້ກະຕຸດນັ້ນ, ເຈົ້າເອົາສອງມືຂອງເຈົ້າຈັບໄດ້,
ແຕ່ມັນຍັງຢູ່ໃນພະຣາຊວັງຂອງກະສັດ.
[29]ມີສາມສິ່ງທີ່ຍ່າງຍ້າຍໄດ້ສະງ່າງາມ ມີສີ່ສິ່ງທີ່ຍ່າງໄດ້ສະງ່າງາມ ຄື[30]ສິງໂຕ, ຊຶ່ງເປັນສັດທີ່ມີກຳລັງຫລາຍທີ່ສຸດໃນຫມູ່ສັດປ່າ
ແລະບໍ່ຍອມຫັນຫລັງໃຫ້ສິ່ງໃດເລີຍ;[31]ພໍ່ໄກ່ທີ່ຍ່າງຢູ່; ແບ້ຜູ້; ແລະກະສັດຜູ້ທີ່ກອງທະຫານຂອງພະອົງຢູ່ຄຽງຂ້າງພ. ະອົງ
[32]ຖ້າເຈົ້າເປັນຄົນໂງ່ຈ້າເວົ້າຍົກຍ້ອງຕົນເອງ, ຫລືຖ້າເຈົ້າຄິດແຜນຊົ່ວ, ຈົ່ງເອົາມືປິດປາກໄວ້.[33]ເຊັ່ນດຽວກັນກວນນ້ຳນົມໄດ້ເນີຍ
ແລະເມື່ອບິດດັງໄດ້ໂລຫິດ ການກະທຳທີ່ເກີດຂຶ້ນເວລາໂກດຮ້າຍກໍໄດ້ຄວາມຂັດແຍງ.


generated on Tue Jun 17 19:01:42 2025

31 1ຖ້ອຍຄຳຂອງກະສັດເລມູເອນ ຊຶ່ງເປັນຄຳສອນທີ່ພະຣາຊຊະນີຂອງພະອົງໄດ້ບອກສອນພະອົງ.2ແມ່ນຫຍັງ, ລູກຊາຍ, ຂອງແມ່ເອີຍ?
ລູກຊາຍແຫ່ງຄຳປະຕິຍານຂອງແມ່?3ຢ່າໃຫ້ກຳລັງຂອງເຈົ້າແກ່ພວກຜູ້ຍິງ,
ຫລືໃຫ້ທາງຂອງເຈົ້າແກ່ຄົນເຫລົ່ານັ້ນຜູ້ທີ່ທຳລາຍເຫລົ່າກະສັດ.

4ເລມູເອນເອີຍ, ບໍ່ສົມຄວນທີ່ກະສັດທັງຫລາຍ, ບໍ່ສົມຄວນທີ່ບັນດາກະສັດຈະກິນເຫລົ້າອະງຸ່ນ, ຫລືຜູ້ຄອບຄອງຈະຖາມວ່າ, "ເຫລົ້າທີ່ແຮງໆ
ຢູ່ທີ່ໃດ?"5ເກງວ່າພວກເຂົາຈະລືມສິ່ງທີ່ຕາເປັນກົດຫມາຍນັ້ນ, ແລະບິດເບືອນສິດທິຂອງຜູ້ທີ່ຖືກກົດຂີ່ທັງຫລາຍ.
6ຈົ່ງໃຫ້ເຫລົ້າແຮງໆ ແກ່ບຸກຄົນທີ່ກຳລັງຈະພິນາດ ແລະເຫລົ້າອະງຸ່ນແກ່ຜູ້ຂົມຂື່ນໃຈ.7ເຂົາຈະດື່ມແລະຈະລືມຄວາມຍາກຈົນຂອງເຂົາ
ແລະເຂົາຈະບໍ່ຈົດຈຳຄວາມທຸກຂອງເຂົາອີກຕໍ່ໄປ.
8ຈົ່ງເວົ້າເພື່ອຄົນເຫລົ່ານັ້ນທີ່ເປັນໃບ້, ເພື່ອຄະດີຄວາມຂອງທຸກຄົນທີ່ກຳລັງຈະພິນາດ.9ຈົ່ງເວົ້າອອກມາແລະພິພາກສາຢ່າງຊອບທຳ
ຈົ່ງໃຫ້ຄວາມຍຸດຕິທຳແກ່ຄົນຍາກຈົນແລະປະຊາຊົນທີ່ຂັດສົນ.
10ໃຜຈະພົບເມຍທີ່ເລີດປະເສີດ? ຄຸນຄ່າຂອງນາງເລີດລ້ຳກວ່າເຄື່ອງປະດັບ.11ຫົວໃຈຂອງຜົວຂອງນາງກໍໄວ້ໃຈນາງ,
ແລະເຂົາຈະບໍ່ມີທາງເປັນຄົນຍາກຈົນເລີຍ.12ນາງເຮັດສິ່ງດີທັງຫລາຍໃຫ້ເຂົາ ແລະບໍ່ນຳສິ່ງດີທັງຫລາຍໃຫ້ເຂົາ ແລະບໍ່ນຳສິ່ງຮ້າຍ
ຕະຫລອດວັນຄືນແຫ່ງຊີວິດຂອງນາງ.
13ນາງສະແຫວງຫາຂົນແກະແລະຜ້າປ່ານ, ແລະເຮັດວຽກດ້ວຍມືຢ່າງເຕັມໃຈ.14ນາງເປັນເຫມືອນເຮືອທັງຫລາຍຂອງພໍ່ຄ້າ;
ນາງນຳອາຫານຂອງນາງມາຈາກທີ່ໄກ.15ນາງລຸກຂຶ້ນຕັ້ງແຕ່ຍັງມືດຢູ່ ແລະຈັດອາຫານໃຫ້ຄອບຄົວຂອງນາງ,
ແລະນາງຈັດງານໃຫ້ແກ່ສາວໃຊ້ຂອງນາງ.
16ນາງເລາະເບິ່ງໄຮ່ນາແລ້ວຊື້ໄວ້, ດ້ວຍຜົນແຫ່ງມືຂອງນາງ ນາງປູກສວນອະງຸ່ນ.17ນາງຄາດແອວຂອງນາງດ້ວຍກຳລັງ
ແລະເຮັດໃຫ້ແຂນຂອງນາງແຂງແຮງ.
18ນາງຮູ້ວ່າສິນຄ້າຫຍັງຈະໄດ້ກຳໄລສຳລັບນາງ, ຕະຫລອດຄ່ຳຄືນຕະກຽງຂອງນາງກໍບໍ່ດັບ.19ນາງຍື່ນມືອອກຈັບເຄື່ອງປັ່ນຝາຍ,
ແລະນາງຍິບດ້າຍ ນາງຍື່ນມືອອກ.
20ນາງຍື່ນມືຂອງນາງຊ່ວຍປະຊາຊົນທີ່ຂັດສົນ, ນາງຍື່ນມືຂອງນາງອອກໄປຊ່ວຍປະຊາຊົນທີ່ຍາກຈົນ.
21ນາງບໍ່ຢ້ານຫິມະມາເຮັດໃຫ້ຄອບຄົວຂອງນາງຫນາວ, ເພາະທຸກຄົນໃນຄອບຄົວຂອງນາງສວມເສື້ອສີແດງ.
22ນາງເຮັດຜ້າປູຕຽງສຳລັບຕຽງຂອງນາງ, ແລະນາງສວມເສື້ອຜ້າເຮັດດ້ວຍຜ້າເລນິນເນື້ອລະອຽດແລະຜ້າສີມ່ວງ.
23ຜົວຂອງນາງເປັນທີ່ຮູ້ຈັກທີ່ປະຕູເມືອງ, ເມື່ອເຂົານັ່ງຢູ່ໃນຫມູ່ພວກຜູ້ອາວຸໂສຂອງແຜ່ນດິນ.
24ນາງເຮັດເຄື່ອງນຸ່ງຫົ່ມດ້ວຍຜ້າເລນິນໄວ້ຂາຍ, ແລະນາງຂາຍສິ່ງຜ້າຄາດແອວໃຫ້ແກ່ພໍ່ຄ້າ.25ນາງໄດ້ສວມອາລົມດ້ວຍກຳລັງແລະກຽດຕິຍົດ,
ແລະນາງຫົວຂວັນໃຫ້ແກ່ເຫດການທີ່ຈະມາເຖິງ.
26ນາງອ້າປາກກ່າວດ້ວຍປັນຍາ ແລະກົດລະບຽບທີ່ຄວນອ່ອນຫວານທີ່ລີ້ນຂອງນາງ.27ນາງດູແລຄວາມເປັນຢູ່ໃນຄອບຄົວຢ່າງດີ
ແລະບໍ່ກິນອາຫານທີ່ໄດ້ມາຈາກຄວາມກຽດຄ້ານ.
28ລູກໆ ຂອງນາງຕື່ນຂຶ້ນມາແລະກໍຊົມເຊີຍນາງ, ແລະຜົວຂອງນາງກໍສັນລະເສີນນາງ, ກ່າວວ່າ,29ຍິງຫລວງຫລາຍເຮັດໄດ້ດີ,
ແຕ່ນາງດີເລີດຍິ່ງກວ່າຍິງທັງຫມົດ.”
30ສະເຫນ່ເປັນຂອງຫລອກລວງ, ແລະຄວາມງາມກໍບໍ່ສູນເສຍ ແຕ່ຍິງທີ່ຢຳເກງພຣະຢາເວ, ນາງຈະໄດ້ຮັບຄຳສັນສະເສີນ.
31ຈົ່ງໃຫ້ນາງຮັບຜົນແຫ່ງນ້ຳມືຂອງນາງ ແລະໃຫ້ການງານຂອງນາງສັນລະເສີນນາງທີ່ປະຕູເມືອງ.

# ປັນຍາຈານ

1 1ຂໍ້ຄວາມເຫລົ່ານີ້ເປັນຖ້ອຍຄຳຂອງອາຈານ, ຜູ້ເປັນເຊື້ອສາຍຂອງດາວິດ ແລະ ກະສັດຢູ່ໃນນະຄອນເຢຣູຊາເລັມ.2ອາຈານໄດ້ເວົ້າດັ່ງນີ້ວ່າ.
"ເຫມືອນກັບອາຍຫມອກ, ເຫມືອນກັບສາຍລົມໃນກະແສລົມ, ທຸກສິ່ງສາລະພັດລ້ວນແຕ່ອະນິຈັງ, ເຫລືອໄວ້ແຕ່ຄຳຖາມຫລວງຫລາຍ.
3ມະນຸດໄດ້ປະໂຫຍດອັນໃດ ນອກຈາກການທຳງານ ຈາກທຸກຢ່າງທີ່ພວກເຂົາເຮັດຢູ່ພາຍໃຕ້ດວງຕາເວັນ?

4ຄົນລຸ້ນຫນຶ່ງຈາກໄປ, ແລະ ຄົນອີກລຸ້ນຫນຶ່ງເກີດມາ, ແຕ່ແຜ່ນດິນໂລກຍັງຄົງເປັນນິດ.5ດວງຕາເວັນຂຶ້ນ, ແລະ ດວງຕາເວັນຕົກ ແລ້ວກໍຟ້າວ
ເຄື່ອນໄປສູ່ບ່ອນທີ່ມັນຂຶ້ນມາອີກ.6ລົມພັດໄປທາງທິດໃຕ້ ແລະ ພັດວຽນກັບມາໄປທາງທິດເຫນືອ, ລົມພັດວຽນໄປຕາມທາງຂອງມັນ ແລະ ພັດ
ຜ່ານກັບມາອີກ.
7ແມ່ນ້ຳທຸກສາຍໄຫລໄປສູ່ທະເລ, ແຕ່ທະເລກໍຍັງບໍ່ເຄີຍເຕັມ. ແມ່ນ້ຳໄຫລໄປສູ່ທີ່ໃດກໍໄຫລໄປສູ່ທີ່ນັ້ນອີກ.8ທຸກສິ່ງສາລະພັດກໍອ່ອນເມື່ອຍ, ແລະ
ບໍ່ມີໃຜສາມາດບັນລະຍາຍເລື່ອງນີ້ໄດ້. ຕາກໍບໍ່ເຄີຍພໍໃຈກັບສິ່ທີ່ເບິ່ງເຫັນ, ຫລື ຫູກໍບໍ່ອີ່ມກັບສິ່ງທີ່ໄດ້ຍິນ.
9ອັນໃດກໍຕາມທີ່ມີຢູ່ແລ້ວກໍເປັນສິ່ງທີ່ຈະເກີດຂຶ້ນອີກ, ແລະ ສິ່ງໃດກໍຕາມທີ່ເຄີຍເຮັດແລ້ວ ກໍເປັນສິ່ງທີ່ຈະຕ້ອງເຮັດອີກ. ບໍ່ມີຫຍັງໃຫມ່ຢູ່ໃຕ້
ດວງຕາເວັນ.10ມີສິ່ງໃດທີ່ອາດຈະເວົ້າໄດ້ວ່າ, “ເບິ່ງແມ! ນີ້ເປັນສິ່ງໃຫມ່'? ອັນໃດກໍຕາມທີ່ໄດ້ມີຢູ່ແລ້ວ, ກໍມີຢູ່ເປັນເວລານານກ່ອນພວກເຮົາອີກ.
11ເບິ່ງເຫມືອນວ່າບໍ່ມີຜູ້ໃດຈື່ຈຳໄດ້ໃນສິ່ງທີ່ໄດ້ເກີດຂຶ້ນໃນສະໄຫມກ່ອນ, ແລະ ສິ່ງຕ່າງໆທີ່ໄດ້ເກີດມາພາຍຫລັງ ແລະ ສິ່ງຈະເກີດຂຶ້ນໃນ
ອະນາຄົດກໍເບິ່ງເຫມືອນວ່າຈະບໍ່ມີການຈົດຈຳກັນດ້ວຍ."
12ຂ້ານ້ອຍເປັນອາຈານ, ແລະ ກໍເຄີຍເປັນກະສັດຂອງຊາວອິດສະຣາເອນໃນກຸງເຢຣູຊາເລັມ.13ຂ້ານ້ອຍໄດ້ຕັ້ງໃຈສຶກສາຮ່ຳຮຽນ ແລະ
ຄົ້ນຫາທຸກສິ່ງທີ່ຢູ່ພາຍໃຕ້ທ້ອງຟ້າດ້ວຍສະຕິປັນຍາ. ການຄົ້ນຫານັ້ນຄືພາລະທີ່ເມື່ອຍຍາກທີ່ພຣະເຈົ້າໄດ້ປຣະທານ
ແກ່ລູກຫລານຂອງມະນຸດໃຫ້ວຸ້ນຢູ່ກັບງານນັ້ນ.14ຂ້ານ້ອຍເຄີຍເຫັນການກະທຳທຸກຢ່າງທີ່ທຳກັນພາຍໃຕ້ດວງຕາເວັນ, ແລະ ເບິ່ງເຖີດ, ການງານ
ທັງຫມົດເຫລົ່ານັ້ນ. ກໍເປັນເຫມືອນອາຍຫມອກ ແລະ ດັ່ງການແລ່ນໄລ່ໄປຕາມລົມ.15ສິ່ງທີ່ຄົດຢູ່ໃຫ້ຊື່ບໍ່ໄດ້! ສິ່ງທີ່ຂາດຢູ່ກໍຈະນັບໃຫ້ຄົບບໍ່ໄດ້.

[16]ຂ້ານ້ອຍໄດ້ເຄີຍເວົ້າກັບໃຈຕົນເອງວ່າ, "ເບິ່ງດູ, ຂ້ານ້ອຍມີສະຕິປັນຍາຫລາຍ ຍິ່ງກວ່າທຸກຄົນທີ່ຢູ່ກ່ອນ ຂ້ານ້ອຍໃນນະຄອນເຢຣູຊາເລັມ.
ຈິດໃຈຂອງ ຂ້ານ້ອຍໄດ້ເຫັນສະຕິປັນຍາ ແລະ ຄວາມຮູ້ອັນຍິ່ງໃຫຍ່."[17]ເພາະເຫດນີ້ ຂ້ານ້ອຍຈຶ່ງໄດ້ຕັ້ງໃຈທີ່ຈະຮູ້ສະຕິປັນຍາ ແລະ
ຄວາມບ້າປ່ວງ ແລະ ຄວາມໂງ່ຈ້າດ້ວຍ. ຂ້ານ້ອຍໄດ້ມາເຂົ້າໃຈວ່າ ນີ້ກໍເປັນການກິນລົມກິນແລ້ງຄືກັນ.[18]ເພາະໃນສະຕິປັນຍາທີ່ອຸດົມສົມບູນນັ້ນ,
ກໍມີຄວາມວິຕົກກັງວົນຫລາຍເທົ່ານັ້ນ, ແລະ ຜູ້ທີ່ເພີ່ມຄວາມຮູ້ກໍເພີ່ມຄວາມເສົ້າໂສກ.


generated on Tue Jun 17 19:01:42 2025

2 1ຂ້ານ້ອຍໄດ້ເວົ້າໃນໃຈວ່າ, "ມາເທາະ, ຂ້ານ້ອຍຈະລອງເບິ່ງເຈົ້າດ້ວຍຄວາມສຸກ. ຖ້າຢ່າງນັ້ນ
ກໍຈົ່ງເພີດເພີນກັບຄວາມສະຫນຸກສະຫນານເຖີດ". ແຕ່ເບິ່ງແມ, ເລື່ອງນີ້ກໍເປັນແຕ່ລົມພັດພຽງຊົ່ວຄາວ.2ຂ້ານ້ອຍໄດ້ເວົ້າກ່ຽວກັບການ
ຫົວຂວັນວ່າ, "ເປັນການໂງ່ຈ້າ," ແລະ ກ່ຽວກັບຄວາມສະຫນຸກສະຫນານ, "ມັນມີປະໂຫຍດອັນໃດ?

3ຂ້ານ້ອຍໄດ້ຄົ້ນເບິ່ງໃນໃຈຂອງຂ້ານ້ອຍວ່າ ເຮັດແນວໃດຈຶ່ງຈະເຮັດຕາມໃຈປາຖະຫນາຂອງ ຂ້ານ້ອຍດ້ວຍເຫລົ້າອະງຸ່ນ.
ຂ້ານ້ອຍໄດ້ປ່ອຍໃຫ້ຈິດໃຈຂອງຂ້ານ້ອຍນຳຂ້ານ້ອຍໄປ ດ້ວຍສະຕິປັນຍາ ເຖິງແມ່ນວ່າຂ້ານ້ອຍຍັງຄົງຍຶດຄວາມໂງ່ຈາໄວ້, ຂ້ານ້ອຍກໍຕ້ອງການທີ່
ຈະພົບ ວ່າອັນໃດດີສຳລັບຄົນເຮົາ ທີ່ຈະທຳກັນພາຍໃຕ້ທ້ອງຟ້າຕະຫລອດຊີວິດຂອງພວກເຂົາ.
4ຂ້ານ້ອຍໄດ້ສຳເລັດສິ່ງໃຫຍ່ຫລວງຫລາຍ. ຂ້ານ້ອຍໄດ້ປຸກເຮືອນຫລາຍຫລັງເພື່ອຕົນເອງ ແລະ ໄດ້ປູກສວນອະງຸ່ນໄວ້ຫລາຍບ່ອນ.5ຂ້ານ້ອຍໄດ້
ເຮັດສວນຄົວ ແລະ ສວນພັກຜ່ອນຢ່ອນໃຈຕ່າງໆ; ຂ້ານ້ອຍໄດ້ປູກຕົ້ນໄມ້ທຸກຊະນິດໄວ້ໃນສວນເຫລົ່ານັ້ນ.6ຂ້ານ້ອຍໄດ້ຂຸດສ້າງສະນ້ຳ
ຫລາຍແຫ່ງ ເພື່ອໃຊ້ຫົດພືດພັນຕົ້ນໄມ້ໃຫ້ເຕີບໂຕ.
7ຂ້ານ້ອຍໄດ້ຊື້ບັນດາຂ້າທາດຊາຍ ແລະ ຍິງໄວ້; ຂ້ານ້ອຍມີບັນຂ້າທາດທີ່ໄດ້ເກີດຢູ່ໃນວັງຂອງຂ້ານ້ອຍ. ຂ້ານ້ອຍໄດ້ມີຝູງແກະ ແລະ
ຝູງງົວທີ່ເປັນສັດລ້ຽງ, ຫລາຍຍິ່ງກວ່າກະສັດໃດທີ່ໄດ້ປົກຄອງມາກ່ອນຂ້ານ້ອຍໃນກຸງເຢຣູຊາເລັມ.8ຂ້ານ້ອຍໄດ້ສະສົມເງິນ ແລະ ທອງຄຳ
ໄວ້ສຳລັບຕົນເອງດ້ວຍ, ແລະ ຊັບສົມບັດຂອງບັນດາກະສັດ ແລະ ດິນແດນແຄ້ວນຕ່າງໆ. ຂ້ານ້ອຍໄດ້ມີບັນດານັກຮ້ອງຊາຍ ແລະ ຍິງ
ໄວ້ສຳລັບຕົນເອງ- ແລະ ເມຍນ້ອຍມາກມາຍ ຊຶ່ງເປັນສິ່ງທີ່ຊອບໃຈຂອງບັນດາລູກຊາຍທັງຫລາຍຂອງມະນຸດ.
9ດັ່ງນັ້ນ ຂ້ານ້ອຍຈຶ່ງຍິ່ງໃຫຍ່ກວ່າ ແລະ ມັ່ງຄັ່ງກວ່າທຸກຄົນທີ່ເຄີຍຢູ່ມາກ່ອນຂ້ານ້ອຍໃນກຸງເຢຣູຊາເລັມ, ແລະ ສະຕິປັນຍາຂອງຂ້ານ້ອຍຍັງຄົງຢູ່
ກັບຂ້ານ້ອຍ.10ບໍ່ວ່າສິ່ງໃດທີ່ໃນຕາຂອງຂ້ານ້ອຍປາຖະຫນາຈະເຫັນ, ຂ້ານ້ອຍກໍບໍ່ໄດ້ຫັກຫ້າມຈິດໃຈຈາກສິ່ງເຫລົ່ານັ້ນ.
ຂ້ານ້ອຍບໍ່ໄດ້ຫ້າມໃຈຈາກຄວາມສະຫນຸກສະຫນານໃດເລີຍ, ເພາະຫົວໃຈຂອງຂ້ານ້ອຍຊື່ນຊົມສຳລັບແຮງງານທັງຫມົດຂອງຂ້ານ້ອຍ
ແລະຄວາມປິຕິຍິນດີເປັນລາງວັນຂອງຂ້ານ້ອຍສຳລັບການງານທັງຫມົດຂອງຂ້ານ້ອຍດ້ວຍ.
11ແລ້ວຂ້ານ້ອຍໄດ້ຫລຽວເບິ່ງທີ່ການກະທຳທັງຫມົດທີ່ມືຂອງຂ້ານ້ອຍໄດ້ເຮັດສຳເລັດ, ແລະ ໃນການງານທີ່ຂ້ານ້ອຍໄດ້ເຮັດໄປ,
ແຕ່ທຸກຢ່າງລ້ວນອານິຈັງ ແລະ ກິນລົມກິນແລ້ງອີກ. ບໍ່ມີປະໂຫຍດອັນໃດພາຍໃຕ້ດວງຕາເວັນໃນການງານນັ້ນ.12ແລ້ວຂ້ານ້ອຍໄດ
◌້ກັບມາພິຈາລະນາເຖິງສະຕິປັນຍາ, ແລະ ຄວາມບ້າບໍ່ ແລະ ຄວາມໂງ່. ເພາະກະສັດອົງຕໍ່ໄປ
ຜູ້ທີ່ມາພາຍຫລັງກະສັດອົງດັ່ງກ່າວຈະເຮັດອັນໃດທີ່ຍັງເຮັດບໍ່ສຳເລັດໄດ້ຫລືບໍ່?
13ແລ້ວຂ້ານ້ອຍໄດ້ເລີ່ມເຂົ້າໃຈວ່າ ສະຕິປັນຍາໄດ້ປຽບເຫນືອຄວາມໂງ່ຈ້າ, ຊຶ່ງເຫມືອນກັບຄວາມສະຫວ່າງກໍດີກວ່າຄວາມມືດນັ້ນ.
14ຄົນສະຫລາດໃຊ້ຕາໃນສະຫມອງຂອງເຂົາເບິ່ງບ່ອນທີ່ເຂົາກຳລັງໄປ, ແຕ່ຄົນໂງ່ຈ້າເດີນໃນຄວາມມືດ, ຢ່າງໃດກໍຕາມ ຂ້ານ້ອຍຮູ້ວ່າມີຊາຕາກຳ
ຢ່າງດຽວກັນທີ່ກຳນົດໄວ້ສຳລັບທຸກຄົນ.
15ແລ້ວຂ້ານ້ອຍໄດ້ເວົ້າໃນໃຈວ່າ, "ສິ່ງທີ່ເກີດຂຶ້ນກັບຄົນໂງ່, ກໍຈະເກີດຂຶ້ນກັບຂ້ານ້ອຍດ້ວຍ. ເພາະສະນັ້ນຈະມີອັນໃດເຮັດໃຫ້ແຕກຕ່າງ
ຖ້າຂ້ານ້ອຍສະຫລາດຫລາຍ?" ຂ້ານ້ອຍສະຫລູບໃນໃຈຂອງຂ້ານ້ອຍວ່າ, "ນີ້ກໍເປັນອະນິຈັງທັງສິ້ນ."16ເພາະຄົນສະຫລາດ,
ກໍເຫມືອນກັບຄົນໂງ່ຈ້າ, ທີ່ບໍ່ໄດ້ເປັນທີ່ຈົດຈຳໄດ້ນານ. ຕັ້ງແຕ່ມື້ນີ້ໄປ ທຸກສິ່ງກໍຈະຖືກລືມໄປຍາວນານ. ຄົນສະຫລາດກໍຕາຍເຫມືອນກັນກັບ
ຄົນໂງ່ຈ້າຕາຍ.
17ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ກຽດຊັງຊີວິດ ເພາະການງານທັງຫມົດທີ່ເຮັດພາຍໃຕ້ດວງຕາເວັນນັ້ນເປັນຄວາມຊົ່ວຮ້າຍ ບໍ່ໄດ້ນຳຫຍັງເລີຍມາໃຫ້
ຂ້ານ້ອຍ. ນີ້ເປັນເພາະທຸກສິ່ງລ້ວນແຕ່ອະນິຈັງ ແລະ ເປັນລົມເປັນແລ້ງ.18ຂ້ານ້ອຍໄດ້ກຽດຊັງຄວາມສຳເລັດທຸກຢ່າງ ສຳລັບສິ່ງທີ່
ຂ້ານ້ອຍໄດ້ທຳງານພາຍໃຕ້ດວງຕາເວັນນີ້ ເພາະຂ້ານ້ອຍຕ້ອງປະສິ່ງເຫລົ່ານັ້ນໄວ້ເບື້ອງຫລັງໃຫ້ແກ່ຄົນທີ່ມາພາຍຫລັງ ຂ້ານ້ອຍ.
19ເພາະໃຜຈະຮູ້ວ່າເຂົາຈະເປັນຄົນສະຫລາດຫລື ຄົນໂງ່ຈ້າ? ແຕ່ເຂົາຈະເປັນເຈົ້າຂອງທຸກສິ່ງພາຍໃຕ້ດວງຕາເວັນທີ່ການງານ
ແລະສະຕິປັນຍາຂອງຂ້ານ້ອຍໄດ້ສ້າງໄວ້. ນີ້ກໍຄືອະນິຈັງທັງສິ້ນ.20ເພາະສະນັ້ນ ຈິດໃຈຂອງຂ້ານ້ອຍໄດ້ເລີ່ມໃນການງານທີ່ຂ້ານ້ອຍໄດ້
ເຮັດພາຍໃຕ້ດວງຕາເວັນ.
21ເພາະອາດຈະມີຄົນທີ່ເຮັດວຽກດ້ວຍສະຕິປັນຍາ, ດ້ວຍຄວາມຮູ້ຄວາມສາມາດ, ແລະ ຄວາມຊຳນິຊຳນານ, ແຕ່ເຂົາຕ້ອງປະທຸກສິ່ງທີ່ເຂົາມີໃຫ້
ແກ່ຄົນທີ່ບໍ່ໄດ້ເຮັດສິ່ງໃດເລີຍ. ນີ້ກໍເປັນອະນິຈັງ ແລະ ບໍ່ຖືກຕ້ອງເລີຍ22ເພາະຈະໄດ້ປະໂຫຍດອັນໃດ ທີ່ຄົນເຮົາເຮັດວຽກຫນັກ ແລະ
ພະຍາຍາມຕັ້ງໃຈເຮັດວຽກທີ່ລຳບາກຂອງເຂົາໃຫ້ສຳເລັດພາຍໃຕ້ດວງຕາເວັນ?23ການງານຂອງເຂົາທີ່ເຕັມໄປດ້ວຍຄວາມເຈັບປວດ ແລະຄວາມ
ລະທົມຂົມຂື່ນທຸກວັນ, ພໍເຖິງຕອນກາງຄືນ ຈິດໃຈຂອງເຂົາກໍບໍ່ພົບຄວາມສະຫງົບ. ນີ້ກໍເປັນອະນິຈັງທັງສິ້ນ.
24ບໍ່ມີອັນໃດດີສຳລັບຄົນເຮົາກວ່າການກິນແລະ ດື່ມ ແລະ ພໍໃຈກັບສິ່ງທີ່ດີໃນງານຂອງເຂົາ. ຂ້ານ້ອຍໄດ້ເຫັນວ່າຄວາມຈິງນີ້ມາຈາກ
ພຣະຫັດຂອງພຣະເຈົ້າ.25ເພາະໃຜຈະສາມາດກິນ ຫລື ຈະມີຄວາມສະຫນຸກສະຫນານໃດໆທີ່ຕ່າງຈາກພຣະເຈົ້າໄດ້ຢ່າງໃດ?
26ພຣະເຈົ້າປຣະທານສະຕິປັນຍາ, ແລະ ຄວາມຮູ້ ແລະ ຄວາມຊື່ນຊົມຍິນດີ ໃຫ້ກັບຜູ້ທີ່ພຣະອົງຊົງພໍພຣະໄທ. ແຕ່ຢ່າງໃດກໍດີ, ພຣະອົງ
ປະທານງານທີ່ເກັບຮວບຮວມໃຫ້ກັບຄົນບາບ, ເພື່ອທີ່ພຣະອົງຈະຊົງປຣະທານ ສິ່ງນັ້ນໃຫ້ກັບຜູ້ທີ່ພຣະອົງຊົງພໍພຣະໄທ. ນີ້ກໍເປັນອະນິຈັງ ແລະ
ກິນລົມກິນແລ້ງດ້ວຍ.


generated on Tue Jun 17 19:01:42 2025

3 1ມີເວລາທີ່ກຳນົດໄວ້ສຳລັບທຸກສິ່ງ, ແລະ ມີລະດູການສຳລັບຈຸດມຸ່ງຫມາຍທຸກຢ່າງພາຍໃຕ້ທ້ອງຟ້າ.2ມີເວລາສຳລັບໃຫ້ເກີດ ແລະເວລາຕາຍ,
ເວລາສຳລັບປູກ ແລະ ເວລາສຳລັບຫລົກຖິ້ມ,3ມີເວລາສຳລັບຂ້າ ແລະ ເວລາສຳລັບປິ່ນປົວໃຫ້ດີ, ມີເວລາສຳລັບມ້າງລົງ ແລະເວລາສຳລັບ
ກໍ່ສ້າງຂຶ້ນ.

4ມີເວລາທີ່ຮ້ອງໄຫ້ ແລະ ເວລາທີ່ຫົວ, ມີເວລາໂສກເສົ້າ ແລະ ເວລາຟ້ອນລຳ,5ເວລາໂຍນກ້ອນຫີນອອກໄປ ແລະ ເວລາເກັບຮວບຮວມກ້ອນຫີນ
ໄວ້ຄືນ, ມີເວລາສວມກອດຄົນອື່ນໆ, ແລະ ເວລາເລີກຈາກການໂອບກອດ.
6ມີເວລາສະແຫວງຫາສິ່ງຕ່າງໆ ແລະ ເວລາຢຸດສະແຫວງຫາ, ມີເວລາເກັບສິ່ງຕ່າງໆໄວ້ ແລະເວລາໂຍນສິ່ງຕ່າງໆຖິ້ມໄປ,7ມີເວລາຈີກເສື້ອຜ້າ
ແລະ ເວລາຫຍິບເສື້ອຜ້າ, ມີເວລານິດງຽບ ແລະ ເວລາເວົ້າຈາ.
8ມີເວລາສຳລັບຮັກ ແລະ ເວລາກຽດຊັງ, ມີເວລາເຮັດສົງຄາມ ແລະ ເວລາສ້າງສັນຕິພາບ.9ຄົນງານໄດ້ປະໂຫຍດຫຍັງ ໃນການເຮັດວຽກງານ
ທັງຫມົດຂອງເຂົາ?10ຂ້ານ້ອຍໄດ້ເຫັນການງານທີ່ພຣະເຈົ້າໄດ້ປຣະທານແກ່ມະນຸດທີ່ຈະເຮັດໃຫ້ສຳເລັດ.
11ພຣະເຈົ້າໄດ້ຊົງເຮັດທຸກສິ່ງໃຫ້ເຫມາະສົມຕາມເວລາຂອງມັນ. ພຣະອົງໄດ້ຊົງໃສ່ຄວາມເປັນນິຣັນການໄວ້ໃນຈິດໃຈຂອງພວກເຂົາດ້ວຍ. ແຕ່
ມະນຸດບໍ່ສາມາດເຂົ້າໃຈ ພຣະຣາຊກິດທີ່ພຣະເຈົ້າໄດ້ຊົງກະທຳ, ຕັ້ງແຕ່ປະຖົມມະການ ເຖິງການສຸດທ້າຍຂອງພວກເຂົາ.
12ສຳລັບຄົນໃດຫນຶ່ງ ຂ້ານ້ອຍຮູ້ວ່າບໍ່ມີອັນໃດດີກວ່າຄວາມຊື່ນຊົມຍິນດີ ແລະ ການເຮັດດີຕະຫລອດຊີວິດຂອງເຂົາ -13ແລະ ທຸກຄົນຄວນ
ຈະໄດ້ກິນ ແລະ ດື່ມ, ແລະ ເຂົ້າໃຈເຖິງການເພີດເພີນກັບສິ່ງດີທີ່ມາຈາກການງານທັງສິ້ນຂອງເຂົາ. ນີ້ເປັນຂອງປະທານທີ່ມາຈາກພຣະເຈົ້າ.
14ຂ້ານ້ອຍຮູ້ວ່າ ອັນໃດກໍ່ຕາມທີ່ພຣະເຈົ້າຊົງກະທຳກໍ່ຈະດຳລົງຢູ່ຕະຫລອດໄປ. ບໍ່ມີອັນໃດສາມາດທີ່ຈະເພີ່ມເຂົ້າໄປໄດ້ ຫລື ເອົາອອກໄປໄດ້,
ເພາະຄືພຣະເຈົ້ານັ້ນເອງ ທີ່ໄດ້ຊົງກະທຳ ສິ່ງນັ້ນເພື່ອໃຫ້ຄົນທັງຫລາຍຈະເຂົ້າມາໃກ້ພຣະອົງດ້ວຍການຖວາຍພຣະກຽດ.15ສິ່ງໃດທີ່ມີຢູ່ແລ້ວ; ສິ່ງ
ໃດທີ່ຈະມີຂຶ້ນ ກໍ່ໄດ້ມີຢູ່ແລ້ວ. ພຣະເຈົ້າຊົງເຮັດໃຫ້ມະນຸດໄດ້ຄົ້ນຫາສິ່ງຕ່າງໆທີ່ຊ້ອນຢູ່.
16ຂ້ານ້ອຍໄດ້ເຫັນຄວາມອະທຳທີ່ຢູ່ພາຍໃຕ້ດວງຕາເວັນ, ທີ່ຊຶ່ງຄວນມີຄວາມຍຸດຕິທຳ, ແລະ ໃນສະຖານທີ່ແຫ່ງຄວາມຊອບທຳ,
ກໍ່ມີຄວາມອະທຳຢູ່ທີ່ນັ້ນ.17ຂ້ານ້ອຍໄດ້ເວົ້າໃນໃຈວ່າ, "ພຣະເຈົ້າຈະຊົງພິພາກສາຄົນຊອບທຳ ແລະຄົນອະທຳໃນເວລາທີ່ເຫມາະສົມສຳລັບ
ທຸກເລື່ອງແລະ ການກະທຳທຸກຢ່າງ."
18ຂ້ານ້ອຍໄດ້ກ່າວໃນໃຈວ່າ, "ພຣະເຈົ້າຊົງທົດສອບມະນຸດ ເພື່ອທີ່ຈະຊົງສະແດງໃຫ້ພວກເຂົາຮູ້ວ່າພວກເຂົາກໍ່ເປັນເຫມືອນກັບສັດ."
19ເພາະຊາຕາກຳຂອງລູກຫລານຂອງມະນຸດແລະ ຊາຕາກຳຂອງສັດ ກໍ່ເປັນຊາຕາກຳຢ່າງດຽວກັນ.
ຄວາມຕາຍຂອງຄົນຫນຶ່ງກໍ່ຄືຄວາມຕາຍຂອງຄົນອື່ນ. ການຫາຍໃຈກໍ່ຄືກັນສຳລັບທຸກຄົນ. ມະນຸດບໍ່ມີອັນໃດໄດ້ປຽບ ເຫນືອກວ່າສັດ ເພາະ
ທຸກສິ່ງກໍ່ເປັນແຕ່ພຽງອືດໃຈດຽວບໍ່ແມ່ນບໍ?20ທຸກຢ່າງກໍ່ຈະໄປສູ່ບ່ອນດຽວກັນ. ທຸກຢ່າງມາຈາກຂີ້ຝຸ່ນດິນ, ແລະ ທຸກຢ່າງກໍ່ກັບໄປເປັນຂີ້ຝຸ່ນດິນ.
21ຜູ້ໃດຢັ້ງຢືນໄດ້ວ່າ ວິນຍານຂອງມະນຸດຂຶ້ນໄປສູ່ເບື້ອງເທິງ ແລະວິນຍານຂອງສັດລົງໄປຍັງເບື້ອງລຸ່ມໃນແຜ່ນດິນໂລກຫລືບໍ?22ເພາະສະນັ້ນ
ຂ້ານ້ອຍຈຶ່ງສຳນຶກອີກວ່າ ບໍ່ມີສິ່ງໃດດີສຳລັບຄົນເຮົາກວ່າການເພີດເພີນໃນການງານຂອງເຂົາ, ເພາະນັ້ນຄືຫນ້າທີ່ທີ່ເຂົາໄດ້ຮັບມອບຫມາຍ.
ໃຜຈະສາມາດນຳເຂົາກັບມາໄດ້ວ່າມີສິ່ງໃດເກີດຂຶ້ນພາຍຫລັງເຂົາ?

 generated on Tue Jun 17 19:01:42 2025

4 [1]ອີກຄັ້ງທີ່ຂ້ານ້ອຍກໍໄດ້ຄິດກ່ຽວກັບການຂົ່ມເຫັງ ທຸກຢ່າງທີ່ໄດ້ກະທຳພາຍໃຕ້ດວງຕາເວັນ. ແລະເບິ່ງເຖີດ, ນໍ້າຕາຂອງຄົນທີ່ຖືກຂົ່ມເຫັງ, ແລະ
ພວກເຂົາບໍ່ມີຜູ້ໃດປອບໃຈພວກເຂົາ! ອຳນາດໄດ້ຢູ່ໃນມືຂອງພວກຄົນທີ່ກົດຂີ່, ແລະ ບໍ່ມີໃຜປອບໃຈພວກເຂົາ!

[2]ເພາະສະນັ້ນ ຂ້ານ້ອຍຂໍສະແດງຄວາມຍິນດີກັບຄົນຕາຍ, ຄົນເຫລົ່ານັ້ນທີ່ໄດ້ຕາຍໄປແລ້ວ, ແຕ່ບໍ່ແມ່ນກັບຄົນທີ່ມີຊີວິດ,
ຄົນເຫລົ່ານັ້ນທີ່ຍັງມີຊີວິດຢູ່.[3]ແຕ່ເຖິງຢ່າງໃດກໍຕາມ, ໂຊກດີກ່ວາທັງສອງຄົນ ແມ່ນຄົນທີ່ຍັງບໍ່ເຄີຍມີຊີວິດຢູ່, ຄົນທີ່ຍັງບໍ່ເຄີຍເຫັນ
ການກະທຳທີ່ຊົ່ວຮ້າຍໃດໆ, ທີ່ໄດ້ກະທຳຢູ່ພາຍໃຕ້ດວງຕາເວັນນີ້.
[4]ແລ້ວຂ້ານ້ອຍໄດ້ເຫັນການເຮັດວຽກຢ່າງຫນັກທຸກຢ່າງ ແລະ ຄວາມຊຳນານໃນການງານ ທຸກຢ່າງ ກໍເຮັດໃຫ້ເພື່ອນບ້ານຂອງຄົນນັ້ນອິດສາ. ນີ້
ກໍອະນິຈັງ ແລະ ກິນລົມກິນແລ້ງດ້ວຍ.
[5]ຄົນໂງ່ຈ້າກຸມມືຂອງເຂົາໄວ້ ແລະບໍ່ເຮັດວຽກ, ດັ່ງນັ້ນອາຫານຂອງເຂົາກໍຄືເນື້ອຫນັງຂອງເຂົາເອງ.[6]ແຕ່ກໍມີປະໂຫຍດຫລາຍກວ່າສອງກຳມື
ດ້ວຍການທຳງານດ້ວຍພະຍາຍາມ ແບບກິນລົມກິນແລ້ງ.
[7]ແລ້ວຂ້ານ້ອຍໄດ້ຄິດອີກກ່ຽວການໄຮ້ປະໂຫຍດຫລາຍກວ່າ, ມີອານິຈັງຫລາຍກວ່າຢູ່ພາຍໃຕ້ດວງຕາເວັນ.[8]ມີຄົນປະເພດຫນຶ່ງທີ່ຢູ່ຄົນດຽວ.
ເຂົາບໍ່ມີໃຜເລີຍ, ບໍ່ມີລູກຊາຍ ຫລື ອ້າຍເອື້ອຍນ້ອງ. ແຕ່ບໍ່ເຄີຍຢຸດເຮັດວຽກງານ, ທັງສິ້ນຂອງເຂົາ, ແລະ ຕາຂອງເຂົາກໍບໍ່ເຄີຍພໍໃຈກັບ
ຄວາມຮັ່ງມີທີ່ເພີ່ມພູນຂຶ້ນ. ເຂົາສົງໃສວ່າ, "ຂ້ານ້ອຍກຳລັງເຮັດວຽກຢ່າງຫນັກ ແລະ ຫ້າມໃຈຕົນເອງຕໍ່ຄວາມ
ສະຫນຸກສະຫນານເພື່ອຜູ້ໃດກັນ? ສະຖານະການທີ່ຊົ່ວຮ້າຍນີ້, ກໍຄືອະນິຈັງຄືກັນ.
[9]ສອງຄົນເຮັດວຽກດີກວ່າຄົນດຽວ ພວກເຂົາຮ່ວມກັນກໍໄດ້ຮັບຜົນຕອບແທນທີ່ດີສຳລັບງານຫນັກຂອງພວກເຂົາ.[10]ເພາະຖ້າຄົນຫນຶ່ງລົ້ມລົງ
ອີກຄົນຫນຶ່ງກໍຊູເພື່ອນຂອງລາວໃຫ້ລຸກຂຶ້ນມາໄດ້. ແຕ່ຄວາມເສົ້າກໍຍັງຕິດຕາມຄົນທີ່ຢູ່ຄົນດຽວໄປ ເພາະເມື່ອເຂົາລົ້ມລົງກໍບໍ່ມີຜູ້ໃດທີ່ຈະຊູລາວ
ຂຶ້ນ.[11]ຖ້າສອງຄົນນອນຢູ່ດ້ວຍກັນ, ພວກເຂົາກໍອົບອຸ່ນໄດ້, ແຕ່ຄົນທີ່ຢູ່ຄົນດຽວ ຈະອົບອຸ່ນໄດ້ຢ່າງໃດ?
[12]ຄົນດຽວເອົາຊະນະໄດ້, ແຕ່ສອງຄົນຍ່ອມຕໍ່ຕ້ານການໂຈມຕີໄດ້, ແລະ ເຊືອກສາມກຽວກໍບໍ່ຂາດໄດ້ງ່າຍໆຈັກເທື່ອ.
[13]ການເປັນຄົນຫນຸ່ມທີ່ຍາກຈົນແຕ່ສະຫລາດກໍດີກວ່າ ກະສັດເຖົ້າ ແລະ ໂງ່ຈ້າຜູ້ທີ່ບໍ່ຮູ້ຈັກທີ່ຈະຮັບຟັງຄຳເຕືອນອີກຕໍ່ໄປ.[14]ນີ້ເປັນຄວາມຈິງ,
ເຖິງແມ່ນວ່າຊາຍຫນຸ່ມຄົນນັ້ນຈະອອກມາຈາກຄຸກມາເປັນກະສັດ, ຫລື ເຖິງແມ່ນວ່າເຂົາໄດ້ເກີດມາເປັນຄົນຍາກຈົນໃນອານາຈັກຂອງເຂົາ.
[15]ແຕ່ຢ່າງໃດກໍຕາມ, ຂ້ານ້ອຍໄດ້ເຫັນວ່າ ທຸກຄົນທີ່ໄດ້ມີຊີວິດຢູ່ ແລະ ເດີນໄປມາພາຍໃຕ້ດວງຕາເວັນຕ່າງກໍຈະເຂົ້າຂ້າງຊາຍຫນຸ່ມ
ອີກຄົນຫນຶ່ງທີ່ໄດ້ຂຶ້ນເປັນກະສັດ.[16]ປະຊາຊົນທຸກຄົນກໍຕ້ອງການເຊື່ອຟັງຕໍ່ກະສັດອົງໃຫມ່ຢ່າງບໍ່ສິ້ນສຸດ, ແຕ່ພາຍຫລັງພວກເຂົາຫລາຍຄົນ ກໍບໍ່
ຍົກຍ້ອງກະສັດອົງນັ້ນອີກຕໍ່ໄປ. ແນ່ນອນສະຖານະການເຊັ່ນນີ້ ມັນຊ່າງອະນິຈັງ ແລະ ກິນລົມກິນແລ້ງ.


generated on Tue Jun 17 19:01:42 2025

# 5

[1]ຈົ່ງລະວັງ ຄວາມປະພຶດຂອງເຈົ້າໃຫ້ດີ ເມື່ອເຈົ້າເຂົ້າໄປໃນພຣະວິຫານຂອງພຣະເຈົ້າ. ຈົ່ງໄປທີ່ນັ້ນເພື່ອຟັງ. ການຟັງກໍດີກວ່າຄົນໂງ່ຈ້າຖວາຍ
ເຄື່ອງບູຊາ ໃນຂະນະທີ່ບໍ່ຮູ້ສິ່ງທີ່ພວກເຂົາເຮັດໃນຊີວິດນັ້ນເປັນຄວາມຊົ່ວຮ້າຍ.

[2]ຢ່າໄດ້ໄວໂພດທີ່ຈະເວົ້າດ້ວຍປາກຂອງເຈົ້າ, ແລະ ຢ່າໃຫ້ໃຈຂອງເຈົ້າໄວເກີນໄປ ທີ່ຈະນຳບັນຫາຂຶ້ນຕໍ່ໜ້າພຣະເຈົ້າ. ພຣະເຈົ້າ
ສະຖິດໃນສະຫວັນ, ແຕ່ເຈົ້າຢູ່ເທິງແຜ່ນດິນໂລກ. ດັ່ງນັ້ນຈົ່ງໃຫ້ຄຳເວົ້າຂອງເຈົ້າໃຫ້ໜ້ອຍຄຳ.[3]ຖ້າເຈົ້າມີຫລາຍສິ່ງທີ່ຕ້ອງເຮັດຫລາຍເກີນໄປ
ແລະ ວຸ້ນວາຍໃຈກ່ຽວກັບສິ່ງເຫລົ່ານັ້ນ ເຈົ້າກໍອາດຈະມີຝັນຮ້າຍ. ຍິ່ງເຈົ້າເວົ້າຖ້ອຍຄຳຫລາຍຂຶ້ນເທົ່າໃດ, ເຈົ້າກໍອາດຈະເວົ້າແຕ່ສິ່ງທີ່ໂງ່ຈ້າ
ຫລາຍຂຶ້ນເທົ່ານັ້ນ.
[4]ເມື່ອເຈົ້າສາບານຕໍ່ກັບພຣະເຈົ້າ, ຢ່າຊັກຊ້າທີ່ຈະແກ້ຄຳສາບານນັ້ນ, ເພາະພຣະເຈົ້າບໍ່ຊົງພໍພຣະໄທໃນຄົນໂງ່ຈ້າ. ຈົ່ງເຮັດຕາມ
ສິ່ງທີ່ເຈົ້າສາບານໄວ້ວ່າເຈົ້າຈະເຮັດ.[5]ການທີ່ເຈົ້າບໍ່ສາບານເລີຍກໍດີກວ່າ ເຈົ້າສາບານໄວ້ແລ້ວບໍ່ເຮັດໃຫ້ສຳເລັດ.
[6]ຢ່າໃຫ້ປາກຂອງເຈົ້າເປັນເຫດໃຫ້ເນື້ອໜັງຂອງເຈົ້າເຮັດບາບ. ຢ່າເວົ້າຕໍ່ຜູ້ສື່ສານຂອງປະໂຣຫິດວ່າ, "ການສາບານນັ້ນຜິດພາດ." ເປັນຫຍັງ
ຈຶ່ງເຮັດໃຫ້ພຣະເຈົ້າໂກດຮ້າຍໂດຍການສາບານຢ່າງຜິດໆ, ເລັ່ງລັດໃຫ້ພຣະອົງຊົງທຳລາຍການງານໃນມືຂອງເຈົ້າເສຍບໍ?[7]ເພາະໃນຄວາມຝັນ
ຫລາຍກໍເຊັ່ນດຽວກັບໃນຄຳເວົ້າຫລວງຫລາຍ, ທີ່ບໍ່ມີປະໂຫຍດໃດໆ ກໍຄືອະນິຈັງ. ດັ່ງນັ້ນຈົ່ງຢຳເກງພຣະເຈົ້າ.
[8]ເມື່ອເຈົ້າເຫັນຄົນຍາກຈົນຖືກຂົ່ມເຫັງ ແລະ ຖືກຕັດຮອນຄວາມຍຸດຕິທຳ ແລະ ການປະຕິບັດຢ່າງທ່ຽງທຳໃນແຂວງຂອງເຈົ້າ, ຢ່າປະຫລາດໃຈ
ວ່າ ບໍ່ມີໃຜຮູ້, ເພາະມີພວກຄົນທີ່ມີອຳນາດຄອຍເຝົ້າເບິ່ງຄົນເຫລົ່ານັ້ນທີ່ຢູ່ພາຍໃຕ້ພວກເຂົາຢູ່, ແລະ ຍັງມີພວກຄົນທີ່ຢູ່ຊັ້ນຜູ້ໃຫຍ່ກວ່າທີ່ຢູ່
ເໜືອເຂົາອີກ.[9]ຍິ່ງກວ່ານັ້ນ, ກະສັດເອງໄດ້ເອົາຜົນຜະລິດຈາກທົ່ງນາໄປຊຶ່ງເປັນຜົນຜະລິດຂອງແຜ່ນດິນສຳລັບທຸກຄົນ.
[10]ຄົນໃດທີ່ຮັກເງິນ ກໍຈະບໍ່ເຄີຍອີ່ມໃຈດ້ວຍເງິນ, ແລະ ຄົນໃດທີ່ຮັກຄວາມຮັ່ງມີ ກໍຍິ່ງຕ້ອງການຫລາຍຂຶ້ນສະເໝີ. ນີ້ກໍຄືອະນິຈັງທັງສິ້ນ.
[11]ຍິ່ງຄວາມຮັ່ງມີເພີ່ມພູນຫລາຍຂຶ້ນເທົ່າໃດ, ກໍມີຄົນທີ່ເຮັດໃຫ້ສູນເສຍໄປຫລາຍຂຶ້ນດ້ວຍສັນນັ້ນ. ຄົນທີ່ເປັນເຈົ້າຂອງຈະໄດ້
ປະໂຫຍດອັນໃດໃນຄວາມຮັ່ງມີນັ້ນ ນອກຈາກໄດ້ແຕ່ເບິ່ງດ້ວຍຕາຂອງເຂົາເທົ່ານັ້ນ?
[12]ການຫລັບຂອງຄົນເຮັດວຽກໜັກກໍເປັນສຸກ, ບໍ່ວ່າເຂົາຈະກິນໜ້ອຍ ຫລືຫລາຍ, ແຕ່ ຊັບສົມບັດອັນຫລວງຫລາຍຂອງຄົນຮັ່ງມີ
ບໍ່ໄດ້ເຮັດໃຫ້ເຂົາຫລັບສະບາຍ.
[13]ສິ່ງສະຫລົດໃຈຫລາຍທີ່ ຂ້ານ້ອຍໄດ້ເຫັນຢູ່ໃຕ້ດວງຕາເວັນ: ຄົນທີ່ເປັນເຈົ້າຂອງທີ່ກັກຕຸນຄວາມລ້ຳລວຍໄວ້,
ກໍເຮັດໃຫ້ເກີດຄວາມທຸກຍາກໃຫ້ກັບຕົນເອງ.[14]ເມື່ອຄົນຮັ່ງມີໄດ້ສູນເສຍຊັບສົມບັດຂອງເຂົາໄປເນື່ອງຈາກຄວາມເຄາະຮ້າຍ,
ລູກຊາຍຂອງເຂົາເອງຜູ້ທີ່ເຂົາໃຫ້ກຳເນີດກໍບໍ່ເຫລືອຫຍັງໄວ້ໃນມືຂອງເຂົາເລີຍ.
[15]ຄົນໜຶ່ງອອກຈາກທ້ອງແມ່ ແຕ່ຕົວເປົ່າສັນໃດ, ເຂົາກໍຈະຈາກຊີວິດນີ້ໄປແຕ່ຕົວເປົ່າສັນນັ້ນ. ເຂົາບໍ່ສາມາດເອົາສິ່ງໃດຕິດມືຈາກການງານ
ຂອງເຂົາໄປໄດ້ເລີຍ.[16]ຄວາມບໍ່ຖືກຕ້ອງອີກຢ່າງໜຶ່ງທີ່ແນ່ນອນຄື ຄົນໜຶ່ງໄດ້ເກີດມາສັນໃດ, ເຂົາກໍຕ້ອງຈາກໄປສັນນັ້ນ. ດັ່ງນັ້ນຄົນເຮົາຈະໄດ
້ປະໂຫຍດອັນໃດໃນການເຮັດວຽກໜັກທີ່ໄດ້ແຕ່ຈັບລົມ?[17]ເຂົາກິນດ້ວຍຄວາມມືດມົນ ແລະ ຄວາມໂສກເສົ້າຢ່າງຍິ່ງໃຫຍ່ ດ້ວຍຄວາມ
ເຈັບປ່ວຍ, ແລະ ຄວາມໂກດຮ້າຍຕະຫລອດຊົ່ວຊີວິດຂອງເຂົາ.
[18]ເບິ່ງເຖີດ, ສິ່ງທີ່ຂ້ານ້ອຍເຫັນວ່າດີ ແລະ ເໝາະກໍຄື: ໃຫ້ກິນ ແລະດື່ມ ແລະເພີດເພີນກັບສິ່ງທີ່ໄດ້ມາຈາກການງານຂອງເຮົາ, ໃນຂະນະທີ່ເຮົາ
ລຳບາກພາຍໃຕ້ດວງຕາເວັນຕະຫລອດຊົ່ວຊີວິດອັນສັ້ນໆນີ້, ທີ່ພຣະເຈົ້າປຣະທານແກ່ເຮົາ. ເພາະນີ້ເປັນໜ້າທີ່ຮັບຜິດຊອບຂອງມະນຸດ.
[19]ຄົນໃດທີ່ພຣະເຈົ້າປຣະທານຄວາມຮັ່ງມີແລະ ຊັບສົມບັດ ແລະ ຄວາມສາມາດໃນການຮັບສ່ວນແບ່ງຂອງເຂົາ ແລະ ຊົມຊື່ນຍິນດີໃນວຽກງານ
ທີ່ຕົນເຮັດ - ນີ້ຄືຂອງຂວັນມາຈາກພຣະເຈົ້າ.[20]ເພາະເຂົາບໍ່ຄ່ອຍໄດ້ຄິດເຖິງ ວັນເວລາຂອງເຂົາຫລາຍເທົ່າໃດ, ເພາະພຣະເຈົ້າຊົງເຮັດໃຫ້ເຂົາ
ວຸ້ນວາຍສັບສົນກັບສິ່ງທີ່ເຂົາເພີດເພີນໃນການເຮັດນັ້ນ.

6 [1]ມີຄວາມຊົ່ວຮ້າຍຢ່າງຫນຶ່ງທີ່ຂ້ານ້ອຍໄດ້ເຫັນ ຢູ່ພາຍໃຕ້ດວງຕາເວັນ, ແລະ ເປັນສິ່ງທີ່ຮ້າຍແຮງສຳລັບມະນຸດ.[2]ພຣະເຈົ້າອາດ
ຈະປຣະທານຄວາມຮັ່ງມີ, ຊັບສົມບັດ ແລະ ກຽດໃຫ້ແກ່ຄົນຫນຶ່ງເພື່ອທີ່ເຂົາຈະບໍ່ຂາດເຂີນສິ່ງໃດທີ່ເຂົາປາຖະຫນາສຳລັບຕົນເອງເລີຍ,
ແຕ່ແລ້ວພຣະເຈົ້າບໍ່ໄດ້ປຣະທານຄວາມສາມາດທີ່ຈະຊື່ນຊົມກັບສິ່ງນັ້ນ. ຄົນອື່ນກໍໃຊ້ສິ່ງຕ່າງໆຂອງເຂົາແທນ. ນີ້ກໍອະນິຈັງ, ແລະ ຄວາມທຸ
ກໃຈຢ່າງໂຫດຮ້າຍ.

[3]ຖ້າຄົນໃດມີລູກເປັນຮ້ອຍຄົນ ແລະ ມີຊີວິດຍືນຍາວ, ເຖິງແມ່ນວ່າວັນເດືອນປີຂອງເຂົາຈະຫລວງຫລາຍ, ແຕ່ຖ້າໃຈຂອງເຂົາບໍ່ອີ່ມໃຈດ້ວຍສິ່ງດີ
ແລະ ເຂົາບໍ່ໄດ້ຖືກຝັງໄວ້ຢ່າງມີກຽດ, ແລ້ວຂ້ານ້ອຍກໍເວົ້າໄດ້ວ່າ, ເປັນແອນ້ອຍທີ່ຕາຍຕັ້ງແຕ່ເກີດກໍຍັງດີກວ່າຄົນນັ້ນ.
[4]ຢ່າງເຊັ່ນແອນ້ອຍຄົນຫນຶ່ງໄດ້ເກີດມາໃນຄວາມອະນິຈັງ ແລະ ຕາຍໄປໃນຄວາມມືດ, ແລະ ຊື່ຂອງເຂົາກໍຍັງປິດຊ້ອນຢູ່.
[5]ແມ່ນວ່າເດັກຄົນນັ້ນບໍ່ໄດ້ເຫັນດວງຕາເວັນ ຫລື ບໍ່ຮູ້ສິ່ງໃດເລີຍ, ເດັກຄົນນັ້ນກໍໄດ້ພັກສະຫງົບທັ່ງໆທີ່ຊາຍຄົນນັ້ນບໍ່ໄດ້ພັກ.
[6]ເຖິງແມ່ນວ່າຄົນຫນຶ່ງຈະມີຊີວິດຢູ່ ຮອດສອງພັນປີ ແຕ່ບໍ່ຮູ້ເຖິງຄວາມສຳລານໃຈກັບສິ່ງທີ່ດີທັງຫລາຍ, ເຂົາກໍໄປໃນທີ່ດຽວກັນເຫມືອນກັບຄົນ
ອື່ນໆ.
[7]ວຽກງານທັງຫມົດຂອງມະນຸດກໍເພື່ອປາກຂອງເຂົາ, ແຕ່ຄວາມຢາກຂອງເຂົາກໍບໍ່ໄດ້ຮັບຄວາມພໍໃຈ.[8]ແທ້ຈິງແລ້ວ, ຄົນມີປັນຍາໄ
ດ້ປຽບອັນໃດເຫນືອຄົນໂງ່ຈ້າແດ່? ຄົນທີ່ຍາກຈົນໄດ້ປຽບອັນໃດເຖິງແມ່ນວ່າເຂົາຮູ້ຈັກວິທີການປະເຊີນຫນ້າກັບຄົນອື່ນໆ?
[9]ການພໍໃຈກັບສິ່ງທີ່ຕາຫລຽວເຫັນກໍດີກວ່າ ການປາຖະຫນາສິ່ງທີ່ໂຫຍຫາ ດ້ວຍຄວາມຢາກໄດ້ໄປຕາມຕັນຫາ, ຊຶ່ງກໍແມ່ນອະນິຈັງ ແລະ
ຄວາມພະຍາຍາມແບບກິນລົມກິນແລ້ງ.[10]ສິ່ງໃດທີ່ມີຢູ່ກໍໄດ້ຕັ້ງຊື່ເອີ້ນສິ່ງນັ້ນແລ້ວ, ແລະມະນຸດເປັນຢ່າງໃດກໍໄດ້ຮູ້ກັນຢູ່ແລ້ວ.
ດັ່ງນັ້ນຈຶ່ງເປັນການໄຮ້ປະໂຫຍດທີ່ຈະໂຕ້ຖຽງກັບອົງຜູ້ຊຶ່ງເປັນຜູ້ພິພາກສາຄົນທັງປວງທີ່ມີຣິດອຳນາດ.[11]ຍິ່ງເວົ້າຖ້ອຍຄຳຫລາຍເທົ່າໃດກໍຍິ່ງບໍ່ມີ
ປະໂຫຍດຫລາຍຂຶ້ນເທົ່ານັ້ນ, ດັ່ງນັ້ນການເປັນມະນຸດໄດ້ປຽບອັນໃດແດ່.[12]ເພາະໃຜຈະຮູ້ໄດ້ແດ່ວ່າມີຫຍັງດີສຳລັບມະນຸດໃນຊີວິດຂອງເຂົາ
ໃນຊ່ວງເວລາອະນິຈັງຂອງເຂົາ? ວັນເວລາທີ່ໃກ້ຫມົດລົງຈົນເຖິງວັນທີ່ເຂົາຈາກໄປເຫມືອນກັບເງົາ? ໃຜທີ່ຈະບອກກັບມະນຸດໄດ້ວ່າ
ອັນໃດຈະເກີດຂຶ້ນຢູ່ພາຍໃຕ້ດວງຕາເວັນ ຫລັງຈາກທີ່ເຂົາຕາຍໄປແລ້ວ?

 generated on Tue Jun 17 19:01:42 2025

7 1ຊື່ສຽງທີ່ດີກໍດີກວ່ານ້ຳຫອມທີ່ລາຄາແພງ, ແລະ ມື້ຕາຍກໍດີກວ່າມື້ເກີດ. 2ການໄປຍັງເຮືອນທີ່ມີການຮ້ອງໄຫ້ກໍດີກວ່າໄປເຮືອນທີ່ມີການ
ກິນລ້ຽງ, ເພາະການຮ້ອງໄຫ້ຈະເກີດຂຶ້ນກັບທຸກຄົນໃນວາລະສຸດທ້າຍຂອງຊີວິດ, ດັ່ງຄົນທີ່ມີຊີວິດຢູ່ຕ້ອງເກັບເອົາເລື່ອງນີ້ໄວ້ໃນໃຈ.

3ຄວາມໂສກເສົ້າກໍດີກ່ວາສຽງຫົວ, ເພາະຈາກໃບຫນ້າທີ່ເສົ້າຫມອງ, ພາຍຫລັງກໍຈະນໍາມາຊຶ່ງຈິດໃຈທີ່ຍິນດີ.
4ຈິດໃຈຂອງຄົນມີປັນຍາຢູ່ໃນເຮືອນທີ່ມີການຮ້ອງໄຫ້, ແຕ່ຈິດໃຈຂອງຄົນໂງ່ຈ້າ ຢູ່ໃນເຮືອນທີ່ມີງານລ້ຽງ.
5ການຟັງຄໍາເຕືອນຂອງຄົນມີປັນຍາ ກໍດີກວ່າການຟັງເພງຂອງຄົນໂງ່ຈ້າ. 6ເພາະສຽງແຕກຂອງຫນາມທີ່ລຸກໄຫມ້ຢູ່ໃຕ້ຫມໍ້ສັນໃດ,
ສຽງຫົວຂອງຄົນໂງ່ຈ້າ ກໍເປັນສັນນັ້ນ. ນີ້ກໍເປັນອະນິຈັງດ້ວຍ.
7ແທ້ຈິງແລ້ວການບີບບັງຄັບກໍເຮັດໃຫ້ ຄົນມີປັນຍາໂງ່ຈ້າ, ແລະ ສິນຈ້າງລາງວັນ ກໍເຮັດໃຫ້ຈິດໃຈເຊື່ອມຊາມໄປ.
8ບັ້ນປາຍຂອງທຸກສິ່ງກໍດີກວ່າຕອນເລີ່ມຕົ້ນ; ແລະ ຄົນທີ່ມີຄວາມອົດກັ້ນໃຈກໍດີກວ່າຄົນທີ່ມີໃຈຈອງຫອງ. 9ຢ່າໃຫ້ຈິດໃຈຂອງເຈົ້າຮ້າຍໄວ,
ເພາະຄວາມຮ້າຍຝັງຢູ່ໃນຈິດໃຈຂອງຄົນໂງ່ຈ້າ.
10ຢ່າຖາມເລີຍວ່າ, "ເປັນຫຍັງສະໄຫມກ່ອນຈຶ່ງດີກວ່າສະໄຫມນີ້?" ເພາະຄໍາຖາມນີ້ທີ່ເຈົ້າຖາມບໍ່ໄດ້ມາຈາກປັນຍາ.
11ປັນຍາກໍດີເຫມືອນກັບສິ່ງມີຄ່າຕ່າງໆທີ່ເຮົາ ໄດ້ຮັບເປັນມໍຣະດົກຈາກບັນດາບັນພະບູລຸດຂອງເຮົາ.
ປັນຍາໃຫ້ປະໂຫຍດຕໍ່ຄົນເຫລົ່ານັ້ນທີ່ເຫັນດວງຕາເວັນ. 12ເພາະປັນຍາໃຫ້ເຄື່ອງປ້ອງກັນເຊັ່ນດຽວກັບເງິນ ທີ່ສາມາດໃຫ້ຄວາມປ້ອງກັນໄດ້,
ແຕ່ປະໂຫຍດຂອງຄວາມຮູ້ຄືການທີ່ມີປັນຍາໃຫ້ຊີວິດ ຕໍ່ຜູ້ທີ່ມີປັນຍານັ້ນຮູ້.
13ຈົ່ງພິຈາລະນາພຣະລາຊະກິດຂອງພຣະເຈົ້າ: ພຣະອົງໄດ້ຊົງເຮັດໃຫ້ບາງສິ່ງຄົດໄປແລ້ວ ຜູ້ໃດຈະເຮັດໃຫ້ຊື່ໄດ້ແດ່?
14ເມື່ອຊ່ວງເວລາທີ່ດີ, ກໍຈົ່ງມີຊີວິດຢ່າງມີຄວາມສຸກໃນຊ່ວງເວລາທີ່ດີນັ້ນ, ແຕ່ເມື່ອເຖິງຊ່ວງເວລາທີ່ເດືອດຮ້ອນ ຈົ່ງພິຈາລະນາດັ່ງນີ້ວ່າ: ພຣະເຈົ້າ
ຊົງອະນຸຍາດໃຫ້ທັງສອງຢ່າງຄຽງຄູ່ກັນໄປ. ເພາະເຫດນີ້, ຈຶ່ງບໍ່ມີໃຜຈະຄົ້ນພົບໄດ້ວ່າ ສິ່ງໃດທີ່ຈະເກີດຂຶ້ນພາຍຫລັງເຂົາ.
15ຂ້ານ້ອຍໄດ້ເຫັນຫລາຍສິ່ງຫລາຍຢ່າງໃນຊີວິດອານິຈັງຂອງຂ້ານ້ອຍນີ້. ມີພວກຄົນຊອບທໍາທີ່ຈິບຫາຍທັງໆທີ່ມີຄວາມຊອບທໍາໃນພວກເຂົາ,
ແລະ ມີພວກຄົນຊົ່ວຮ້າຍທີ່ມີຊີວິດຍືນຍາວທັງໆທີ່ມີຄວາມຊົ່ວຮ້າຍໃນພວກເຂົາ. 16ຢ່າອວດຕົວເອງວ່າຊອບທໍາ ແລະ ສະຫລາດໃນສາຍຕາ
ຂອງຕົນເອງ. ເປັນຫຍັງເຈົ້າຄວນຈະທໍາລາຍຕົນເອງເສຍ?
17ຢ່າຊົ່ວຊ້າ ຫລືໂງ່ຈ້າຈົນເກີນໄປ. ເປັນຫຍັງເຈົ້າຄວນຈະຕາຍກ່ອນເຖິງເວລາຂອງເຈົ້າ? 18ເປັນການດີທີ່ເຈົ້າຄວນຈະຍຶດເອົາປັນຍານີ້ໄວ້, ແລະ
ທີ່ເຈົ້າຈະບໍ່ປ່ອຍຄວາມຊອບທໍາໄປ. ເພາະຄົນທີ່ຢໍາເກງພຣະເຈົ້າ ຈະພົບກັບພາລະຫນ້າທີ່ທັງສິ້ນຂອງເຂົາ.
19ປັນຍາມີອໍານາດຫລາຍໃນຄົນສະຫລາດ ຫລາຍຍິ່ງກວ່າຜູ້ປົກຄອງສິບຄົນທີ່ຢູ່ໃນເມືອງຫນຶ່ງ. 20ບໍ່ມີຄົນຊອບທໍາຈັກຄົນເທິງແຜ່ນດິນໂລກ ທີ່ເຮັດ
ແຕ່ຄວາມດີ ແລະບໍ່ເຄີຍເຮັດບາບຈັກເທື່ອ.
21ຢ່າໄດ້ຟັງທຸກຄໍາທີ່ໄດ້ເວົ້າ, ເພາະເຈົ້າອາດຈະໄດ້ຍິນຄົນຮັບໃຊ້ຂອງເຈົ້າປ້ອຍດ່າເຈົ້າຢູ່ກໍໄດ້. 22ທາງດຽວກັນ, ເຈົ້າກໍຮູ້ຢູ່ແກ່ໃຈຂອງເຈົ້າເອງ
ວ່າເຈົ້າກໍມັກຈະປ້ອຍດ່າຄົນອື່ນໆເຊັ່ນດຽວກັນ.
23ຂ້ານ້ອຍໄດ້ພິສູດທັງຫມົດ ນີ້ດ້ວຍປັນຍາ ຂ້ານ້ອຍກ່າວວ່າ. "ຂ້ານ້ອຍຈະເປັນຄົນມີປັນຍາ," ແຕ່ກໍບໍ່ໄດ້ຫລາຍໄປກວ່າທີ່ຂ້ານ້ອຍຈະເປັນໄດ້.
24ປັນຍາຢູ່ຫ່າງໄກ ແລະ ເລິກລັບຫລາຍ. ໃຜຈະຄົ້ນພົບປັນຍາໄດ້ແດ່? 25ຂ້ານ້ອຍ; ໄດ້ກັບໃຈຂອງຂ້ານ້ອຍຫັນມາຮຽນຮູ້ ແລະ ກວດສອບ ແລະ
ຊອກຫາປັນຍາ ແລະ ຄໍາອະທິບາຍແຫ່ງຄວາມຈິງ, ແລະ ເພື່ອເຂົ້າໃຈວ່າຄວາມຊົ່ວຊ້າຄືຄວາມໂງ່ ແລະຄວາມໂງ່ຈ້າຄືຄວາມບ້າບໍ່.
26ຂ້ານ້ອຍໄດ້ພົບວ່າ ຄວາມຂົມຂື່ນຍິ່ງກວ່າຄວາມຕາຍຄື ຜູ້ຍິງຄົນໃດທີ່ຈິດໃຈຂອງນາງເຕັມດ້ວຍບ່ວງແຮ້ວ ແລະ ຕະຂ່າຍ, ແລະ ແຂນຂອງນາງ
ເປັນເຫມືອນສາຍໂສ້. ຄົນໃດທີ່ພຣະເຈົ້າຊົງພໍພຣະໄທກໍຈະລອດພົ້ນຈາກນາງໄປໄດ້, ແຕ່ພວກຄົນບາບຈະຖືກນາງດັກຈັບເອົາໄປ.
27"ຈົ່ງພິຈາລະນາສິ່ງທີ່ຂ້ານ້ອຍໄດ້ຄົ້ນພົບ," ອາຈານກ່າວວ່າ. "ຂ້ານ້ອຍໄດ້ເພີ່ມສິ່ງຫນຶ່ງ ທີ່ຄົ້ນພົບເຂົ້າໄປກັບອີກສິ່ງຫນຶ່ງ ເພື່ອທີ່ຈະຊອກຫາ
ຄໍາຕອບແຫ່ງຄວາມຈິງ. 28ນີ້ເປັນສິ່ງທີ່ຂ້ານ້ອຍຍັງຄົງໄດ້ຊອກຫາຕໍ່ໄປ, ແຕ່ຂ້ານ້ອຍກໍຍັງບໍ່ພົບ. ຂ້ານ້ອຍໄດ້ພົບວ່າ ມີຜູ້ຊາຍທີ່ຊອບທໍາພຽງຄົນ
ດຽວ, ໃນທ່າມກາງຜູ້ຊາຍພັນຄົນ, ແຕ່ບໍ່ໄດ້ພົບຜູ້ຍິງຈັກຄົນດຽວ. ໃນທ່າມກາງຄົນເຫລົ່ານັ້ນທັງຫມົດ.
29ຂ້ານ້ອຍໄດ້ພົບພຽງເທົ່ານີ້ວ່າ: ພຣະເຈົ້າໄດ້ຊົງສ້າງມະນຸດໃຫ້ເປັນຄົນທ່ຽງທໍາ, ແຕ່ພວກເຂົາໄດ້ຫລົງໄປສະແຫວງຫາຄວາມຫຍຸ້ງຍາກມາກ
ມາຍ."

8 [1]ໃຜເປັນຄົນມີປັນຍາ? ໃຜຮູ້ໄດ້ວ່າເຫດການຕ່າງໆໃນຊີວິດມີຄວາມຫມາຍວ່າຢ່າງໃດ?. ປັນຍາໃນມະນຸດເຮັດໃຫ້ລາວຍິ້ມແຍ້ມແຈ່ມໃສ,
ແລະ ຄວາມບູດບຶ້ງເທິງໃບຫນ້າຂອງເຂົາກໍປ່ຽນໄປ.

[2]ຂ້ານ້ອຍແນະນຳທ່ານໃຫ້ເຊື່ອຟັງຄຳສັ່ງຂອງກະສັດ ເພາະຄຳສັນຍາຂອງພຣະເຈົ້າປົກປ້ອງພະອົງ.[3]ຢ່າຟ້າວຟັ່ງອອກໄປໃຫ້ພົ້ນຫນ້າເພິ່ນ, ແລະ
ຢ່າໄດ້ດື້ດ້ານໃນການສະຫນັບສະຫນູນສິ່ງໃດທີ່ຜິດ. ເພາະກະສັດຊົງເຮັດຕາມທີ່ພະອົງຊົງປະສົງໄວ້.[4]ຄຳສັ່ງຂອງກະສັດມີອຳນາດ,
ດັ່ງນັ້ນໃຜຈະທູນພະອົງວ່າ, "ພະອົງຊົງກຳລັງເຮັດຫຍັງ?"
[5]ຄົນໃດທີ່ເຮັດຕາມຄຳສັ່ງຂອງກະສັດ ກໍບໍ່ປະສົບອັນຕະລາຍ. ຈິດໃຈຂອງຄົນມີປັນຍາກໍຮູ້ເຖິງການປະຕິບັດ ແລະ ເ
ວລາຂອງການກະທຳທີ່ເຫມາະສົມ.[6]ມີຄຳຕອບທີ່ຖືກຕ້ອງ ແລະມີວິທີທີ່ຈະຕອບສຳລັບທຸກເລື່ອງລາວ, ເພາະຄວາມຍາກລຳບາກຕ່າງໆ
ຂອງມະນຸດກໍຫນັກຫນາສາຫັດ.[7]ບໍ່ມີຜູ້ໃດຮູ້ຈັກສິ່ງທີ່ຈະເກີດຂຶ້ນຕໍ່ໄປໄດ້. ໃຜຈະບອກເຂົາໄດ້ວ່າສິ່ງໃດຈະເກີດຂຶ້ນ.
[8]ບໍ່ມີຜູ້ໃດທີ່ເປັນຄົນມີອຳນາດເຫນືອລົມຫາຍໃຈຂອງເຂົາ, ເພື່ອທີ່ຈະຢຸດລົມຫາຍໃຈນັ້ນແລະ ບໍ່ມີໃຜມີອຳນາດເຫນືອວັນຕາຍຂອງເຂົາ,
ບໍ່ມີໃຜຖືກປົດປະຈຳການຈາກກອງທັບໃນຍາມສູ້ຮົບ, ແລະ ຄວາມອະທຳ ກໍຈະບໍ່ຊ່ວຍຊີວິດຄົນເຫລົ່ານັ້ນ.[9]ຂ້ານ້ອຍໄດ້ສົນໃຈການງານທຸກຢ່າງ;
ທີ່ໄດ້ເກີດຂຶ້ນຢູ່ພາຍໃຕ້ດວງຕາເວັນ. ມີເວລາຫນຶ່ງເມື່ອຄົນຫນຶ່ງຂົ່ມເຫັງອີກຄົນອື່ນ ເພື່ອທີ່ຈະເຮັດໃຫ້ຄົນນັ້ນເຈັບປວດ.
[10]ດັ່ງນັ້ນຂ້ານ້ອຍໄດ້ເຫັນພວກຄົນຊົ່ວຮ້າຍຖືກຝັງຕໍ່ຫນ້າປະຊາຊົນ. ພວກເຂົາຖືກນຳມາຈາກບໍລິເວນທີ່ບໍລິສຸດ ແລະ ຖືກຝັງໄວ້ ແລະປະຊາຊົນກໍ
ຍົກຍ້ອງກັນໃນເມືອງ ທີ່ພວກເຂົາໄດ້ເຮັດການຊົ່ວຮ້າຍເຫລົ່ານັ້ນ. ນີ້ກໍໄຮ້ປະໂຫຍດດ້ວຍ.[11]ເມື່ອການລົງໂທດຕໍ່ຄົນທີ່ຈະເຮັດຊົ່ວ
ຮ້າຍບໍ່ໄດ້ດຳເນີນການໂດຍໄວ, ກໍເປັນການຊັກນຳຈິດໃຈຂອງມະນຸດໃຫ້ເຮັດຊົ່ວ.
[12]ເຖິງແມ່ນວ່າຄົນບາບເຮັດຊົ່ວໄວ້ຕັ້ງຮ້ອຍຢ່າງ ແລະ ກໍຍັງມີຊີວິດຍືນຍາວ, ແຕ່ຂ້ານ້ອຍຮູ້ວ່າມັນຈະເປັນການດີ, “ກັບຄົນເຫລົ່ານັ້ນທີ່ຢຳເກງ
ພຣະເຈົ້າ, ຜູ້ທີ່ຖວາຍກຽດຕໍ່ພຣະພັກພຣະອົງກັບພວກເຂົາ.[13]ແຕ່ຈະບໍ່ເປັນການດີສຳລັບຄົນຊົ່ວຮ້າຍ; ຊີວິດພວກເຂົາຈະບໍ່ຍືນຍາວ.
ວັນເວລາຂອງເຂົາກໍເປັນເຫມືອນດັ່ງເງົາຊົ່ວຄາວ, ເພາະພວກເຂົາບໍ່ໄດ້ຢຳເກງພຣະເຈົ້າ.
[14]ມີອະນິຈັງອີກຢ່າງຫນຶ່ງ - ຄືສິ່ງອື່ນໆທີ່ເກີດຂຶ້ນຢູ່ໃນແຜ່ນດິນໂລກ. ສິ່ງຕ່າງໆທີ່ເກີດຂຶ້ນກັບພວກຄົນຊອບທຳກໍເຫມືອນ
ກັບສິ່ງຕ່າງໆທີ່ເກີດຂຶ້ນກັບຄົນຊົ່ວຮ້າຍ, ແລະ ສິ່ງຕ່າງໆທີ່ເກີດຂຶ້ນກັບຄົນຊົ່ວຮ້າຍ ກໍເຫມືອນກັບສິ່ງຕ່າງໆທີ່ເກີດຂຶ້ນກັບຄົນຊອບທຳ.
ຂ້ານ້ອຍກ່າວວ່ານີ້ກໍອະນິຈັງແທ້ໆ.[15]ສະນັ້ນຂ້ານ້ອຍຈຶ່ງຂໍແນະນຳໃຫ້ມີຄວາມສຸກ, ເພາະສຳລັບມະນຸດ ບໍ່ມີສິ່ງໃດຢູ່ພາຍໃຕ້ດວງຕາເວັນ
ດີໄປກວ່າການກິນແລະ ດື່ມ ແລະມີຄວາມສຸກ. ຄວາມສຸກນີ້ແຫລະ ທີ່ຈະຄຽງຄູ່ໄປກັບເຂົາ ໃນຂະນະທີ່ເຂົາບຸກບືນເຮັດວຽກຕະຫລອດ
ຊີວິດຂອງເຂົາ ທີ່ພຣະເຈົ້າປຣະທານໃຫ້ແກ່ເຂົາຢູ່ພາຍໃຕ້ດວງຕາເວັນ.
[16]ເມື່ອຂ້ານ້ອຍສົນໃຈທີ່ຈະຮູ້ປັນຍາ ແລະຄວາມເຂົ້າໃຈການງານທີ່ທຳກັນເທິງແຜ່ນດິນໂລກ, ການງານທີ່ມັກຈະອົດຫລັບອົດນອນຕະຫລອດມື້
ຕະຫລອດຄືນ,[17]ແລ້ວຂ້ານ້ອຍໄດ້ພິຈາລະນາ ພຣະຣາຊກິດຂອງພຣະເຈົ້າທັງສິ້ນ, ແລະ
ທີ່ມະນຸດບໍ່ເຂົ້າໃຈການງານທີ່ທຳກັນພາຍໃຕ້ດວງຕາເວັນ. ບໍ່ວ່າມະນຸດຈະພະຍາຍາມເພື່ອຫາຄຳຕອບຫລາຍເທົ່າໃດກໍຕາມ ເຂົາກໍຈະບໍ່ພົບ
ຄຳຕອບເຫລົ່ານັ້ນ. ເຖິງແມ່ນວ່າຄົນມີປັນຍາຈະເຊື່ອວ່າເຂົາຮູ້, ແຕ່ວ່າພວກເຂົາບໍ່ຮູ້ຢ່າງແທ້ຈິງ.

 generated on Tue Jun 17 19:01:42 2025

9 [1]ດ້ວຍເຫດສະນີ້ ຂ້ານ້ອຍຈຶ່ງຄິດຕຶກຕອງເຖິງເລື່ອງທັງຫມົດນີ້ຢູ່ໃນໃຈຂອງຂ້ານ້ອຍເພື່ອທີ່ຈະເຂົ້າໃຈການກະທຳ
ກ່ຽວກັບບັນດາຄົນຊອບທຳແລະ ຄົນສະຫລາດ ແລະ ການກະທຳຂອງພວກເຂົາ. ພວກເຂົາຢູ່ໃນພຣະຫັດຂອງພຣະເຈົ້າ.
ບໍ່ມີໃຜຮູ້ວ່າຄວາມຮັກ ຫລືຄວາມກຽດຊັງຈະມາຫາຜູ້ໃດຜູ້ຫນຶ່ງ.

[2]ທຸກຄົນມີຊາຕາກຳຢ່າງດຽວກັນ. ຊາຕາກຳຢ່າງດຽວກັນນັ້ນ ກໍລໍຄອຍຄົນທີ່ຊອບທຳ ແລະ ຄົນອະທຳ, ຄົນດີ, ຄົນທີ່ສະອາດ ແລະ ຄົນມີມົນທິນ,
ແລະ ຄົນທີ່ຖວາຍເຄື່ອງບູຊາ, ຄົນດີຕ້ອງຕາຍສັນໃດ, ຄົນບາບກໍຕ້ອງຕາຍສັນນັ້ນ, ຄົນທີ່ສາບານຈະຕ້ອງຕາຍສັນໃດຄົນທີ່ຢ້ານກົວທີ່
ຈະເຮັດການສາບານກໍຈະຕ້ອງຕາຍສັນນັ້ນ.
[3]ມີຊາຕາກຳກຳນົດໄວ້ສຳລັບທຸກສິ່ງທີ່ເກີດຂຶ້ນຢູ່ພາຍໃຕ້ດວງຕາເວັນນີ້. ຊາຕາກຳຢ່າງດຽວກັນສຳລັບທຸກຄົນ. ຈິດໃຈຂອງມະນຸດເຕັມໄປດ້ວຍ
ຄວາມຊົ່ວຮ້າຍ, ແລະ ຄວາມບ້າບໍກໍຢູ່ໃນຈິດໃຈຂອງພວກເຂົາ ໃນຂະນະທີ່ພວກເຂົາມີຊີວິດຢູ່, ຫລັງຈາກນັ້ນພວກເຂົາກໍໄປຫາຄົນຕາຍ.
[4]ເພາະຄົນໃດທີ່ຢູ່ຮ່ວມກັບ ທຸກຄົນທີ່ມີຊີວິດຢູ່, ກໍມີຄວາມຫວັງ, ເຊັ່ນດຽວກັບຫມາທີ່ຍັງມີຊີວິດຢູ່, ກໍດີກວ່າສິງໂຕທີ່ຕາຍໄປແລ້ວ.[5]ເພາະຄົນທີ່ມີ
ຊີວິດຢູ່ກໍຮູ້ວ່າຕົນຈະຕາຍໄປ, ແຕ່ຜູ້ທີ່ຕາຍໄປແລ້ວກໍບໍ່ຮູ້ຫຍັງເລີຍ. ພວກເຂົາບໍ່ມີບຳເຫນັດໃດໆອີກຕໍ່ໄປ ເພາະຄວາມຈຳຂອງພວກເຂົາຖືກ
ລືມໄລໄປຫມົດສິ້ນ.
[6]ຄວາມຮັກ, ຄວາມກຽດຊັງ, ແລະ ຄວາມອິດສາຂອງພວກເຂົາ ໄດ້ສູນຫາຍໄປນານແລ້ວ. ພວກເຂົາຈະບໍ່ມີສ່ວນກັບສິ່ງໃດອີກເລີຍທີ່ເກີດຂຶ້ນຢູ່
ພາຍໃຕ້ດວງຕາເວັນ.[7]ຈົ່ງໄປຕາມທາງຂອງເຈົ້າເຖີດ, ຈົ່ງກິນອາຫານຂອງເຈົ້າດ້ວຍຄວາມຊື່ນບານ, ແລະ ດື່ມເຫລົ້າອະງຸ່ນຂອງເຈົ້າດ້ວຍຈິດໃຈ
ທີ່ມີຄວາມສຸກ, ເພາະພຣະເຈົ້າໄດ້ຊົງເຫັນຊອບໃນການສະຫລອງການງານທີ່ດີ.[8]ຈົ່ງເຮັດໃຫ້ເສື້ອຜ້າຂອງເຈົ້າຂາວຢູ່ສະເຫມີ ແລະ
ສະໂລມຫົວຂອງເຈົ້າດ້ວຍນ້ຳມັນ.
[9]ຈົ່ງໃຫ້ຊີວິດຂອງເຈົ້າ ມີຄວາມສຸກຢູ່ກັບເມຍທີ່ເຈົ້າຮັກ ຕະຫລອດຊີວິດ ອັນອະນິຈັງຂອງເຈົ້າ, ວັນເວລາທີ່ພຣະເຈົ້າໄດ້ປຣະທານໃຫ້ກັບເຈົ້າ
ຢູ່ພາຍໃຕ້ດວງຕາເວັນ ຕະຫລອດຊີວິດອັນອະນິຈັງຂອງເຈົ້າ. ນັ້ນຄືລາງວັນໃນຊີວິດສຳລັບການງານຂອງເຈົ້າພາຍໃຕ້ດວງອາທິດ.
[10]ມືຂອງເຈົ້າຈັບສິ່ງໃດກໍຕາມທີ່ຈະເຮັດ, ຈົ່ງເຮັດສິ່ງນັ້ນຢ່າງເຕັມກຳລັງຂອງເຈົ້າ, ເພາະບໍ່ມີການກະທຳ, ຫລື ຄຳອະທິບາຍ, ຫລື ຄວາມຮູ້, ຫລື
ປັນຍາໃດໆ ໃນແດນຄົນຕາຍ, ຊຶ່ງທີ່ເຈົ້າກຳລັງຈະໄປ.
[11]ຂ້ານ້ອຍໄດ້ເຫັນສິ່ງຕ່າງໆທີ່ຫນ້າສົນໃຈຢູ່ພາຍໃຕ້ດວງຕາເວັນ: ການແຂ່ງຂັນບໍ່ເປັນຂອງຄົນທີ່ວ່ອງໄວ. ສົງຄາມບໍ່ໄດ້ເປັນຂອງຄົນທີ່ມີກຳລັງ.
ເຂົ້າຈີ່ບໍ່ເປັນຂອງຄົນສະຫລາດ. ຄວາມຮັ່ງມີບໍ່ເປັນຂອງຄົນທີ່ມີຄວາມເຂົ້າໃຈ. ຄວາມໂປດປານບໍ່ເປັນຂອງຄົນທີ່ມີຄວາມຮູ້ . ແຕ່ເວລາ ແລະ
ໂອກາດເກີດຂຶ້ນກັບທຸກໆຄົນ.[12]ເພາະບໍ່ມີໃຜຮູ້ເວລາຕາຍຂອງເຂົາ, ເຊັ່ນດຽວກັບປາທີ່ທີ່ຕິດຢູ່ໃນແຫແຫ່ງຄວາມຕາຍ, ຫລືເຊັ່ນດຽວກັບນົກທີ່
ຖືກຈັບໃນບ້ວງແຮ້ວ. ມະນຸດກໍເຊັ່ນດຽວກັບສັດທີ່ຕິດຢູ່ໃນບ້ວງແຮ້ວແຫ່ງຄວາມຊົ່ວຮ້າຍທີ່ຕົກຢູ່ກັບພວກເຂົາໃນເວລາທີ່ບໍ່ຄາດຝັນ.
[13]ຂ້ານ້ອຍຍັງໄດ້ເຫັນສະຕິປັນຍາມີພາຍໃຕ້ຕາເວັນນີ້ ເບິ່ງຄືຍິ່ງໃຫຍ່ສຳລັບຂ້ານ້ອຍ.[14]ມີເມືອງຫນຶ່ງທີ່ມີຄົນຢູ່ໃນເມືອງນັ້ນຫນ້ອຍຄົນ, ແລະ
ກະສັດຜູ້ຍິ່ງໃຫຍ່ອົງຫນຶ່ງໄດ້ມາໂຈມຕີເມືອງນັ້ນ ແລະ ເພິ່ນປິດລ້ອມເມືອງນັ້ນໄວ້ ແລະ ໄດ້ສ້າງຂັນໄດລ້ອມຮອບໂຈມຕີເມືອງນັ້ນ.
[15]ໃນຂະນະນັ້ນໄດ້ພົບເຫັນຊາຍຄົນຫນຶ່ງທີ່ຍາກຈົນໃນເມືອງນັ້ນ, ລາວເປັນຄົນມີສະຕິປັນຍາ, ເປັນຄົນຊ່ວຍເມືອງ
ນັ້ນໃຫ້ລອດດວ້ຍປັນຍາຂອງລາວ. ແຕ່ພາຍຫລັງກໍບໍ່ມີຜູ້ໃດຄິດເຖິງຊາຍຍາກຈົນຄົນນັ້ນເລີຍ.
[16]ດັ່ງນັ້ນຂ້ານ້ອຍຈຶ່ງພໍສະຫລູບໄດ້ວ່າ, "ປັນຍາດີກວ່າກຳລັງ, ແຕ່ປັນຍາຂອງຊາຍຍາກຈົນ ຄົນນັ້ນຖືກດູຫມິ່ນປະຫມາດ, ແລະ ບໍ່ມີໃຜຟັງ
ຖ້ອຍຄຳຂອງລາວ."
[17]ຖ້ອຍຄຳຂອງຄົນມີປັນຍາ ທີ່ເວົ້າຄ່ອຍໆທີ່ໄດ້ຍິນ ກໍດີກວ່າການຮ້ອງຂອງຜູ້ປົກຄອງຄົນໃນທ່າມກາງພວກຄົນໂງ່ຈ້າ.[18]ປັນຍາດີກວ່າ
ອາວຸດສົງຄາມ, ແຕ່ຄົນບາບຄົນດຽວສາມາດທຳລາຍຄວາມດີໄດ້ຢ່າງຫລວງຫລາຍ.


generated on Tue Jun 17 19:01:42 2025

10 [1]ແມງໄມ້ຕາຍຍ່ອມເຮັດໃຫ້ນ້ຳຫອມມີກິ່ນເຫມັນໄດ້ສັນໃດ, ຄວາມໂງ່ຈ້າພຽງແຕ່ເລັກນ້ອຍກໍມີອຳນາດເຫນືອປັນຍາ ແລະ
ກຽດຕິຍົດໄດ້ສັນນັ້ນ. [2]ຈິດໃຈຂອງຄົນມີປັນຍາຄົນຫນຶ່ງ ນຳໄປທາງຂວາ, ແລະ ຈິດໃຈຂອງຄົນໂງ່ຈ້ານຳໄປທາງຊ້າຍ.[3]ເມື່ອຄົນໂງ່ຈ້າເດີນ
ລົງມາຕາມຖະຫນົນ, ຄວາມຄິດຂອງລາວກໍຂາດສະຕິ, ຊຶ່ງເປັນການເຮັດໃຫ້ທຸກຄົນຮູ້ວ່າຕົນເປັນຄົນໂງ່ຈ້າ.

[4]ຖ້າອາລົມຮ້າຍຂອງຜູ້ເປັນນາຍ ເພີ່ມຂຶ້ນຕໍ່ເຈົ້າ, ຢ່າປະຖິ້ມການງານຂອງເຈົ້າ. ຄວາມໃຈເຢັນຈະເຮັດໃຫ້ຄວາມ
ຮ້າຍຢ່າງຮຸນແຮງສະຫງົບລົງໄດ້.
[5]ມີຄວາມຊົ່ວຮ້າຍອີກຢ່າງຫນຶ່ງທີ່ ຂ້ານ້ອຍໄດ້ເຫັນຢູ່ພາຍໃຕ້ດວງຕາເວັນ, ຄືຄວາມຜິດພາດຢ່າງຫນຶ່ງທີ່ເກີດມາຈາກຜູ້ປົກຄອງ:[6]ຄົນໂງ່ຈ້າໄດ້ຮັບ
ມອບຕຳແຫນ່ງສູງ, ໃນຂະນະທີ່ຄົນທີ່ມີຄວາມສາມາດໄດ້ຮັບມອບຕຳແຫນ່ງທີ່ຕ່ຳຕ້ອຍ.[7]ຂ້ານ້ອຍໄດ້ເຫັນພວກທາດຮັບໃຊ້ກຳລັງຂີ່ມ້າ, ແລະ
ພວກຄົນທີ່ມີຄວາມສາມາດກຳລັງຍ່າງເທິງພື້ນດິນເຫມືອນຢ່າງທາດຮັບໃຊ້.
[8]ຜູ້ໃດທີ່ຂຸດຫລຸມໄວ້ ຜູ້ນັ້ນກໍສາມາດຈະຕົກລົງໄປໃນຫລຸມນັ້ນໄດ້, ແລະ ເມື່ອໃດກໍຕາມທີ່ຜູ້ໃດພັງກຳແພງ, ງູອາດຈະຕອດເຂົາໄດ້.[9]ຜູ້ໃດສະກັດ
ຫີນ ຜູ້ນັ້ນອາດຈະບາດເຈັບເພາະຫີນນັ້ນໄດ້, ແລະ ຜູ້ໃດຕັດໄມ້ຜູ້ນັ້ນກໍປະສົບອັນຕະລາຍຈາກໄມ້ນັ້ນໄດ້.
[10]ຖ້າໃບມີດເຫລັກທີ່ປູ້ແລ້ວ, ແລະ ຄົນບໍ່ຝົນມັນໃຫ້ຄົມ, ແລ້ວເຂົາກໍຕ້ອງໃຊ້ແຮງຫລາຍຂຶ້ນ, ແຕ່ປັນຍາໃຫ້ປະໂຫຍດເພື່ອຄວາມສຳເລັດ.[11]ຖ້າ
ງູຕອດກ່ອນທີ່ຈະເຮັດໃຫ້ມັນເຊື່ອງ, ກໍບໍ່ມີປະໂຫຍດຫຍັງ ສຳລັບຫມໍງູແລ້ວ.
[12]ຖ້ອຍຄຳຈາກປາກຂອງຄົນມີປັນຍາກໍມີພຣະຄຸນ, ແຕ່ຮີມສົບຂອງຄົນໂງ່ຈ້າກໍກືນກິນຕົນເອງ.
[13]ຖ້ອຍຄຳທີ່ເລີ່ມຕົ້ນເຜີເວົ້າອອກມາຈາກປາກຂອງຄົນໂງ່ງ່າວສັນໃດ, ຄວາມໂງ່ກໍອອກມາສັນນັ້ນ ແລະ ໃນຕອນຈົບປາກຂອງເຂົາກໍເຜີເວົ້າ
ອອກມາດ້ວຍຄວາມບ້າບໍ່ຢ່າງຊົ່ວຮ້າຍ.[14]ຄົນໂງ່ຈ້າເວົ້າຖ້ອຍຄຳບໍ່ຊໍ້າຊາກ, ແຕ່ບໍ່ມີຜູ້ໃດຮູ້ສິ່ງທີ່ຈະເກີດຂຶ້ນ. ໃຜຈະຮູ້ໄດ້ວ່າມີຫຍັງຈະເກີດຂຶ້ນ
ຕາມຫລັງເຂົາ?
[15]ການເຮັດວຽກຫນັກຂອງຄົນໂງ່ຈ້າກໍເຮັດໃຫ້ພວກເຂົາອິດເມື່ອຍ, ເພາະພວກເຂົາບໍ່ຮູ້ແມ່ນແຕ່ທາງທີ່ຈະໄປໃນເມືອງ.
[16]ແຜ່ນດິນເອີຍ, ວິບັດແກ່ເຈົ້າ, ຖ້າກະສັດຂອງເຈົ້າຍັງຫນຸ່ມນ້ອຍຢູ່, ແລະ ຖ້າບັນດາຜູ້ນຳ ຂອງເຈົ້າເລີ່ມລ້ຽງສະຫລອງກັນແຕ່ງເຊົ້າ![17]ແຕ່ແຜ່ນ
ດິນເອີຍ, ຄວາມສຸກມີແກ່ເຈົ້າ, ຖ້າກະສັດຂອງພວກເຈົ້າເປັນລູກຊາຍຂອງພວກເຈົ້ານາຍ, ແລະ ຖ້າພວກຜູ້ນຳຂອງເຈົ້າກິນໃນເວລາ
ທີ່ເຫມາະສົມ, ເພື່ອໃຫ້ມີກຳລັງດ ບໍ່ແມ່ນເພື່ອຄວາມເມົາມາຍ!
[18]ເພາະຄວາມຂີ້ຄ້ານ ຫລັງຄາຈຶ່ງເພພັງລົງ, ແລະ ເພາະມືທີ່ຂີ້ຄ້ານຮ້ານເຮືອນນັ້ນຈຶ່ງມີຮູຮົ່ວ.[19]ການກິນລ້ຽງເຮັດໃຫ້ມີການສຽງຫົວ ແລະ ເຫລົ້າ
ອະງຸ່ນນຳມາຊຶ່ງຄວາມມ່ວນຊື່ນສຳບານໃຈຕໍ່ຊີວິດ, ແລະ ເງິນກໍເຮັດໃຫ້ໄດ້ທຸກສິ່ງທີ່ຕ້ອງການ.
[20]ຢ່າສາບແຊ່ງກະສັດ, ແມ່ນແຕ່ຢູ່ໃນໃຈກໍຕາມ, ແລະ ຢ່າສາບແຊ່ງຄົນຮັ່ງມີ ໃນຫ້ອງນອນສ່ວນຕົວຂອງເຈົ້າ. ເພາະນົກໃນທ້ອງຟ້າ
ຈະຄາບຄຳເວົ້າຂອງເຈົ້າໄປ; ໂຕທີ່ມີປີກຈະແຜ່ກະຈາຍເລື່ອງລາວນັ້ນ.


generated on Tue Jun 17 19:01:42 2025

11 [1]ຈົ່ງໂຍນເຂົ້າຈີ່ຂອງເຈົ້າລົງເທິງນ້ຳ, ເພາະຫລັງຈາກນັ້ນອີກຫລາຍວັນເຈົ້າຈະພົບມັນອີກ.[2]ຈົ່ງແບ່ງມັນໃຫ້ອີກເຈັດຄົນ,
ເຖິງແມ່ນຈະເຖິງແປດຄົນກໍຕາມ, ເພາະເຈົ້າບໍ່ຮູ້ວ່າອັນຕະລາຍຊະນິດໃດຈະເກີດຂຶ້ນເທິງໂລກນີ້.[3]ຖ້າເມກເຕັມດ້ວຍຝົນ,
ເມກເຫລົ່ານັ້ນກໍຈະເທຝົນລົງມາ ເທິງແຜ່ນດິນໂລກ, ແລະ ຖ້າຕົ້ນໄມ້ລົ້ມລົງໄປທາງທິດເຫນືອຫລືທາງທິດໃຕ້, ຕົ້ນໄມ້ລົ້ມລົງທີ່ໃດກໍຕາມມັນກໍ
ຍັງຄົງຢູ່ທີ່ນັ້ນ.

[4]ຜູ້ໃດທີ່ເຝົ້າຫລຽວເບິ່ງລົມກໍຈະບໍ່ຫວ່ານພືດ, ແລະຜູ້ໃດທີ່ເຝົ້າຫລຽວເບິ່ງເມກກໍຈະບໍ່ເກັບກ່ຽວ.[5]ເຈົ້າບໍ່ຮູ້ວ່າທາງຂອງລົມ
ຫລືກະດູກຂອງເດັກອ່ອນ ເຕີບໂຕໃນມົດລູກຂອງ ແມ່ຍິງທີ່ຕັ້ງທ້ອງໄດ້ສັນໃດ, ເຈົ້າກໍຈະບໍ່ສາມາດເຂົ້າໃຈພຣະຣາຊກິດຂອງພຣະເຈົ້າ, ຜູ້ຊົງສ້າງ
ສັບພະທຸກສິ່ງສັນນັ້ນ.
[6]ໃນຕອນເຊົ້າ ຈົ່ງຫວ່ານເມັດພືດຂອງເຈົ້າ; ຈົ່ງເຮັດວຽກງານດ້ວຍມືຂອງເຈົ້າ, ຈົນເຖິງຄ່ຳຕາມຄວາມຈຳເປັນ ເພາະເຈົ້າບໍ່ຮູ້ດອກວ່າອັນໃດມັນ
ຈະເລີນ, ບໍ່ວ່າຈະເປັນຕອນເຊົ້າ ຫລືຕອນແລງ, ຫລື ສິ່ງນີ້ ຫລືສິ່ງນັ້ນ, ຫລືທັງສອງຢ່າງຈະດີເຫມືອນກັນ.[7]ແທ້ຈິງແສງສະຫວ່າງເຮັດໃຫ້ສົດຊື່ນ,
ແລະ ມັນເປັນສິ່ງທີ່ຫນ້າພໍໃຈຕໍ່ໃນຕາທີ່ຫລຽວເຫັນດວງຕາເວັນ.[8]ຖ້າຫາກຄົນໃດມີຊີວິດ ຢູ່ມາກມາຍຫລາຍປີ, ກໍຂໍໃຫ້ເຂົາມີ
ຄວາມສຸກຕະຫລອດປີເຫລົ່ານັ້ນ, ແຕ່ໃຫ້ເຂົາຄິດກ່ຽວກັບວັນແຫ່ງຄວາມມືດ. ທີ່ຈະມາເຖິງເພາະວັນແຫ່ງຄວາມມືດກໍຈະມີຫລວງຫລາຍ,
ທຸກສິ່ງທີ່ຈະເກີດຂຶ້ນກໍອະນິຈັງ.
[9]ຄົນຫນຸ່ມເອີຍ, ຈົ່ງຊື່ນບານໃນຄວາມຫນຸ່ມແຫນ້ນຂອງເຈົ້າ. ຈົ່ງຕາມຫາຄວາມປາຖະຫນາທີ່ດີໃນຈິດໃຈຂອງເຈົ້າ, ແລະ ສິ່ງ
ໃດກໍຕາມໃນສາຍຕາຂອງເຈົ້າ. ແຕ່ຢ່າງໃດກໍຕາມ, ຈົ່ງຮູ້ວ່າ ພຣະເຈົ້າຈະນຳເຈົ້າໄປສູ່ການພິພາກສາ ສຳລັບທຸກສິ່ງເຫລົ່ານັ້ນ.
[10]ຈົ່ງໄລ່ຄວາມຮ້າຍອອກໄປຈາກໃຈຂອງເຈົ້າ, ແລະ ຢ່າໃສ່ໃຈກັບຄວາມເຈັບປວດໃດໆໃນຮ່າງກາຍຂອງເຈົ້າ, ເພາະໄວຫນຸ່ມແລະ
ກຳລັງຂອງໄວນັ້ນກໍອານິຈັງ.

 generated on Tue Jun 17 19:01:42 2025

12 [1]ຍິງກວ່ານັ້ນ ຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າ ໃນໄວຫນຸ່ມຂອງເຈົ້າ, ກ່ອນທີ່ວັນແຫ່ງຄວາມຍາກລຳບາກຈະມາເຖິງ, ແລະກ່ອນປີ
ທັງຫລາຍຈະມາເຖິງ ເມື່ອເຈົ້າເວົ້າວ່າ, "ຂ້ານ້ອຍບໍ່ມີຄວາມຍິນດີໃນປີເຫລົ່ານັ້ນເລີຍ,"[2]ຈົ່ງເຮັດສິ່ງນີ້ກ່ອນທີ່ແສງສະຫວ່າງຂອງດວງອາທິດ
ແລະ ດວງເດືອນ ແລະ ຫມູ່ດາວຈະມືດໄປ ແລະເມກຫມອກອັນມືດຄຶ້ມກັບມາພາຍຫລັງຈາກຝົນຕົກ.

[3]ນັ້ນເປັນເວລາເມື່ອຍາມເຝົ້າພະຣາຊວັງຈະສັ່ນສະເທືອນ, ແລະ ຜູ້ຊາຍທີ່ແຂງແຮງຈະຫລັງໂກ່ງລົງ, ແລະ ພວກຜູ້ຍິງຢຸດໂມ້ແປ້ງ
ເພາະພວກເຂົາມີຢູ່ຫນ້ອຍ, ແລະ ຄົນເຫລົ່ານັ້ນທີ່ຫລຽວອອກໄປນອກປ່ອງຢ້ຽມ ກໍຫລຽວເຫັນບໍ່ແຈ້ງອີກຕໍ່ໄປ.
[4]ນັ້ນຈະເປັນເວລາທີ່ປະຕູເຫລົ່ານັ້ນຖືກປິດໃນຫົນທາງ, ແລະ ສຽງຂອງການໂມ້ແປ້ງກໍຢຸດໄປ, ເມື່ອຄົນທັງຫລາຍໄດ້ຫວາດກວາ ຕໍ່ສຽງຂອງນົກ,
ແລະ ສຽງຮ້ອງເພງຂອງຍິງສາວໄດ້ຈາງຫາຍໄປ.
[5]ນັ້ນຈະເປັນ ເວລາເມື່ອຄົນທັງຫລາຍ ຈະເລີ່ມຢ້ານຄວາມສູງ ແລະ ອັນຕະລາຍຕ່າງໆຕາມຫົນທາງ, ແລະ ເມື່ອຕົ້ນອາມອນອອກດອກ, ແລະ
ເມື່ອຕັກແຕນເຄື່ອນໂຕເອງ ໄປຢ່າງຊ້າໆ, ແລະ ເມື່ອຄວາມປາຖະຫນາຕາມທຳມະຊາດໄດ້ຫມົດລົງ. ແລ້ວມະນຸດກໍໄປຍັງບ້ານອັນ
ຖາວອນຂອງເຂົາ, ແລະ ຄົນທີ່ໄວ້ທຸກເຫລົ່ານັ້ນ ກໍເດີນໄປຕາມຖະຫນົນຫົນທາງ.
[6]ເຈົ້າຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າກ່ອນ ທີ່ສາຍເງິນຈະຂາດ, ຫລືຊາມທອງຄຳຈະຕົກລົງແລະ ຫັກ, ຫລືໄຫນ້ຳຈະແຕກກະຈາຍໄປທີ່ນໍ້າພຸ,
ຫລືລໍ້ຕັກນໍ້າທີ່ນໍ້າສ້າງຈະເພ,[7]ກ່ອນທີ່ຂີ້ຝຸ່ນດິນຈະກັບມາສູ່ແຜ່ນດິນໂລກຕາມເດີມ, ແລະຈິດວິນຍານນັ້ນກໍຈະກັບຄືນໄປຫາພຣະເຈົ້າ ຜູ້ຊົງ
ປຣະທານໃຫ້ນັ້ນ.
[8]ອາຈານກ່າວວ່າ, "ອະນິຈັງ," "ທຸກສິ່ງລ້ວນແຕ່ອະນິຈັງ."[9]ອາຈານເປັນຄົນມີປັນຍາ ແລະ ເພິ່ນໄດ້ສອນຄວາມຮູ້ໃຫ້ແກ່ປະຊາຊົນ. ເພິ່ນໄດ້
ສຶກສາ ແລະ ພິຈາລະນາໄຕ່ຕອງ ແລະລຽບລຽງສຸພາສິດໄວ້ຢ່າງຖ້ວນຖີ່.
[10]ອາຈານໄດ້ຄົ້ນຫາຄວາມຊັດເຈນ, ທີ່ໃຊ້ໃນການຂຽນຖ້ອຍຄຳແຫ່ງຄວາມຈິງທັງຫມົດໄວ້ຢ່າງຊື່ສັດ.[11]ຄຳເວົ້າຂອງຄົນມີປັນຍາເປັນເຫມືອນກັບ
ໄມ້ເທົ້າອັນແຫລມຄົມ. ຄຳເວົ້າຂອງບັນດາເຈົ້ານາຍໃນສຸພາສິດຕ່າງໆທີ່ຮວບຮວມໄວ້ ທີ່ຊຶ່ງຜູ້ລ້ຽງຄົນຫນຶ່ງໄດ້ສອນ ກໍເຫມືອນກັບຕະປູທີ່
ຕອກເລິກລົງໄປ.
[12]ລູກຊາຍຂອງຂ້ານ້ອຍເອີຍ, ຈົ່ງລະວັງບາງສິ່ງໃຫ້ຫລາຍຂຶ້ນອີກ: ການເຮັດຫນັງສືຫລວງຫລາຍ, ທີ່ບໍ່ເປັນການສິ້ນສຸດ ແລະ ການຮຽນ
ຫລາຍໂພດກໍພາໃຫ້ຮ່າງກາຍອ່ອນເພຍ.
[13]ຕອນຈົບຂອງເລື່ອງນີ້ ຫລັງຈາກທີ່ໄດ້ຟັງທຸກສິ່ງແລ້ວ, ຄືເຈົ້າຕ້ອງຢຳເກງພຣະເຈົ້າ ແລະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ, ເພາະ
ສິ່ງນີ້ເປັນຫນ້າທີ່ທັງສິ້ນຂອງມະນຸດ.[14]ເພາະວ່າພຣະເຈົ້າຈະຊົງນຳການກະທຳທຸກຢ່າງເຂົ້າສູ່ການພິພາກສາ ພ້ອມດ້ວຍທຸກສິ່ງທີ່ເຊື່ອງຢູ່ບໍ່ວ່າດີ
ຫລືຊົ່ວ.

# ຍອດເພງ

1 [1]ບົດເພງຂອງທຸກໆບົດເພງ, ເຊິ່ງເປັນຂອງໂຊໂລໂມນ. ຍິງສາວກຳລັງເວົ້າກັບຄົນຮັກຂອງນາງ[2]ໂອ້, ທ່ານຈະຈູບຂ້າພະ
ເຈົ້າດ້ວຍການຈູບຈາກປາກຂອງທ່ານ, ເພາະວ່າຄວາມຮັກຂອງທ່ານນັ້ນດີກວ່າເຫລົ້າອະງຸ່ນ.
[3]ນ້ຳມັນແຫ່ງການຊົງເຈີມຂອງທ່ານມີກິ່ນຫອມແຫ່ງຄວາມຍິນດີ; ນາມຊື່ຂອງທ່ານແມ່ນຄືກັບນ້ຳຫອມທີ່ກຳລັງລິນໄຫລ,
ເພື່ອວ່າຍິງສາວທັງຫລາຍນັ້ນຈະຫລົງຮັກທ່ານ.[4]ຂໍໃຫ້ພາຂ້າພະເຈົ້າໄປກັບທ່ານ, ແລະ ພວກເຮົາຈະແລ່ນໄປ. ຜູ້ຍິງທີ່ເວົ້າກັບຕົວເອງ
ກະສັດໄດ້ພາຂ້າພະເຈົ້າເຂົ້າໄປໃນຫ້ອງຂອງທ່ານ. ຜູ້ຍິງກຳລັງເວົ້າກັບຄົນຮັກຂອງເຂົາ ຂ້າພະເຈົ້າດີໃຈ; ຂ້າພະ
ເຈົ້າມີຄວາມຍິນດີກ່ຽວກັບທ່ານ; ຂໍໃຫ້ຂ້າພະເຈົ້າສະເຫລີມສະຫລອງຄວາມຮັກຂອງທ່ານ; ມັນດີກ່ວາເຫລົ້າອາງຸ່ນ.
ມັນເປັນເລື່ອງທຳມະຊາດທີ່ຜູ້ຍິງຄົນອື່ນຄວນເຄົາລົບທ່ານ. ຍິງນັ້ນເວົ້າກັບແມ່ຍິງຄົນອື່ນໆ.

[5]ຂ້າພະເຈົ້າເປັນຄົນດຳຄ້ຳແຕ່ກໍຫນ້າຮັກ, ພວກທ່ານບັນດາບຸດສາວຂອງບັນດາບັນພະບຸລຸດແຫ່ງນະຄອນ ເຢຣູຊາເລັມ — ຜິວດຳ
ຄ້ຳທີ່ຄ້າຍຄືກັບຜ້າເຕັ້ນຂອງຄົນເກດາ, ຫນ້າຮັກຄືກັບຜ້າກັ້ງຂອງໂຊໂລໂມນ.[6]ຢ່າຕັ້ງໃຈເບິ່ງຂ້າພະເຈົ້າເພາະວ່າຂ້າພະເຈົ້າດຳຄ້ຳ,
ເພາະວ່າແສງຕາເວັນໄດ້ເຜົາໄຫມ້ ຂ້າພະເຈົ້າ. ບັນດາບຸດຊາຍຂອງມານດາຂອງຂ້າພະເຈົ້າຕ່າງກໍຄຽດແຄ້ນຂ້າພະເຈົ້າ; ພວກເຂົາໄດ້ໃຫ້ຂ້າ
ພະເຈົ້າເບິ່ງແຍງສວນອະງຸ່ນ, ແຕ່ສວນອະງຸ່ນຂອງຂ້າພະເຈົ້າເອງນັ້ນ ຂ້າພະເຈົ້າບໍ່ໄດ້ເບິ່ງແຍງ.
[7]ບອກຂ້າພະເຈົ້າແດ່, ທ່ານຜູ້ທີ່ຂ້າພະເຈົ້າຮັກ. ທ່ານລ້ຽງຝູງແກະຂອງທ່ານຢູ່ໃສ? ທ່ານເອົາຝູງແກະຂອງທ່ານໄປໄວ້ບ່ອນໃດໃນຍາມຕອນທ່ຽງ?
ເປັນຫຍັງຂ້າພະເຈົ້າ ຈຶ່ງເປັນຄືຄົນພະເນຈອນເດີນໄປຂ້າງໆຝູງແກະຂອງທ່ານ? ຄົນຮັກຂອງນາງກຳລັງຕອບນາງ.
[8]ຖ້າຫາກທ່ານບໍ່ຮູ້, ຍິງທີ່ງາມທີ່ສຸດໃນບັນດາຍິງທັງຫລາຍເອີຍ, ຈົ່ງຕິດຕາມຝູງແກະຂອງຂ້ອຍ, ແລະ ປ່ອຍໃຫ້ຝູງແບ້ຫນຸ່ມຂອງເຈົ້າເລັມຫ
ຍ້າຢູ່ໃກ້ເຕັ້ນຂອງຜູ້ລ້ຽງແກະ.
[9]ທີ່ຮັກຂອງຂ້ອຍເອີຍ, ຂ້ອຍປຽບທຽບເຈົ້າ ກັບມ້າແມ່ໃນທ່າມກາງລົດມ້າຂອງກະສັດຟາໂຣ.[10]ແກ້ມຂອງເຈົ້ານັ້ນງົດງາມດ້ວຍເຄື່ອງປະດັບ,
ລຳຄໍຂອງເຈົ້າຕົກແຕ່ງດ້ວຍສາຍຄໍເພັດ.[11]ຂ້ອຍຈະເຮັດເຄື່ອງປະດັບທອງຄຳໃຫ້ກັບເຈົ້າ ພ້ອມກັບລູກຕຸ້ມເງິນ ໃຫ້ກັບນາງດ້ວຍ.
ຍິງນັ້ນກຳລັງເວົ້າກັບຕົວນາງເອງ
[12]ໃນຂະນະທີ່ເຈົ້າຊີວິດໄດ້ນັ່ງຢູ່ເທິງບັນລັງຂອງພະອົງ, ນ້ຳຫອມນາຣະດາຂອງຂ້າພະເຈົ້າກໍມີກິ່ນຫອມໄປ.[13]ຄົນຮັກຂອງຂ້າພະ
ເຈົ້າແມ່ນຄືກັບຫໍ່ຢາຂີ້ເຜີ້ງ ທີ່ນອນລົງລະວ່າງເອິກຂອງຂ້າພະເຈົ້າໃນຍາມຄ່ຳຄືນ.[14]ຄົນຮັກຂອງຂ້າພະເຈົ້າ ເປັນຄືຊໍ່ດອກທຽນ
ກິ່ງໃນສວນອະງຸ່ນແຫ່ງເມືອງເອນເກດີ. ເຈົ້າຊ່າງງົດງາມເຫລືອເກີນຄົນຮັກຂອງຂ້ອຍ. ຄົນຮັກຂອງນາງກຳລັງເວົ້າເຖິງນາງ.
[15]ເບິ່ງແມ, ເຈົ້າງົດງາມ, ທີ່ຮັກຂອງຂ້ອຍ; ເບິ່ງແມ, ເຈົ້າງົດງາມ; ດວງຕາຂອງເຈົ້າປຽບເຫມືອນດວງຕາຂອງນົກກາງແກ.
ຍິງກຳລັງເວົ້າເຖິງທີ່ຮັກຂອງນາງ.
[16]ເບິ່ງເຖີດ, ທ່ານຊ່າງເປັນຄົນເຈົ້າຊູ້ເຫລືອເກີນ, ທີ່ຮັກຂອງຂ້າພະເຈົ້າ, ທ່ານຊ່າງເປັນຄົນເຈົ້າຊູ້ຫລວງຫລາຍ. ພັນໄມ້ຂຽວສົດກໍ
ປູໄວ້ທີ່ຕຽງນອນຂອງພວກເຮົາ.[17]ຊື່ເຮືອນຂອງພວກເຮົາເປັນກິ່ງແປກສີດາ, ແລະ ຫລັງຄາເຮືອນຂອງພວກເຮົາຄືຕົ້ນແປກສາມໃບ.

 generated on Tue Jun 17 19:01:42 2025

2 1ຂ້າພະເຈົ້າເປັນພຽງດອກໄມ້ໃນທົ່ງພຽງ, ເປັນພຽງດອກລິນລີໃນຮ່ອມພູ. ຊາຍນັ້ນກຳລັງເວົ້າກັບນາງ2ທີ່ຮັກຂອງຂ້ອຍ,
ດັ່ງນັ້ນເຈົ້າຈຶ່ງເປັນດັ່ງດອກລິນລີດອກຫນຶ່ງ, ໃນທ່າມກາງຫນາມທັງຫລາຍ, ໃນທ່າມກາງບັນດາບຸດສາວຂອງຄົນໃນປະເທດຂອງຂ້ອຍ.
ຍິງນັ້ນກຳລັງເວົ້າເຖິງຕົວນາງເອງ

3ຄືກັນກັບຕົ້ນຫມາກຈອງ ທີ່ເກີດຢູ່ທ່າມກາງຕົ້ນໄມ້ທັງຫລາຍໃນປ່າສັນໃດ, ຄົນຮັກຂອງຂ້າພະເຈົ້າກໍຢູ່ທ່າມກາງຊາຍຫນຸ່ມທັງຫລາຍສັນນັ້ນ.
ຂ້າພະເຈົ້ານັ່ງລົງກ້ອງຮົ່ມເງົາຂອງມັນດ້ວຍຄວາມຍິນດີຫລາຍ, ແລະ ຫມາກຂອງມັນນັ້ນຫອມຫວານຕໍ່ການຊີມລົດຊາດຂອງຂ້າພະເຈົ້າ.
4ລາວໄດ້ນຳຂ້າພະເຈົ້າມາທີ່ຫໍໂຮງສຳລັບງານລ້ຽງ, ແລະ ປ້າຍຂອງລາວຂຽນວ່າ ຂ້າພະເຈົ້າແມ່ນຄວາມຮັກ.
ຍິງນັ້ນກຳລັງເວົ້າກັບທີ່ຮັກຂອງລາວ.
5ຂໍຄືນໃຈຂ້າພະເຈົ້າດ້ວຍເຄ້ກອະງຸ່ນອົບແຫ້ງ ແລະ ເຮັດໃຫ້ຂ້າພະເຈົ້າສົດຊື່ນດ້ວຍຫມາກຈອງ. ເພາະວ່າຂ້າພະ
ເຈົ້າອ່ອນແອລົງດ້ວຍຄວາມຮັກ. ຍິງນັ້ນກຳລັງເວົ້າກັບຕົວນາງເອງ6ມືຊ້າຍຂອງລາວປະຄອງຫົວຂອງຂ້າພະເຈົ້າ, ແລະ
ມືຂວາຂອງລາວໂອບກອດຂ້າພະເຈົ້າໄວ້. ຍິງນັ້ນກຳລັງເວົ້າກັບຍິງອື່ນ
7ຂ້ອຍຕ້ອງການໃຫ້ສັນຍາແກ່ເຈົ້າ, ບັນດາລູກສາວແຫ່ງນະຄອນເຢຣູຊາເລັມ, ໂດຍຝູງເຍືອງ ແລະ ເຫລົ່າກວາງໂຕແມ່ໃນທົ່ງນາທັງຫລາຍ, ທີ່
ພວກເຈົ້າຈະບໍ່ລົບກວນຄວາມສຳພັນຮັກຂອງພວກເຮົາຈົນກວ່າມັນຈະຜ່ານໄປ. ຍິງນັ້ນກຳລັງເວົ້າກັບຕົວນາງເອງ
8ນີ້ສຽງຂອງຄົນຮັກຂອງຂ້າພະເຈົ້າ! ໂອ້, ລາວມາທີ່ນີ້, ໂດຍກຳລັງໂດດຂ້າມພູເຂົາທັງຫລາຍ, ກຳລັງເຕັ້ນຂ້າມເນີນເຂົາຕ່າງໆ.9ຄົນຮັກຂອງຂ້າ
ພະເຈົ້າເປັນດັ່ງເຍືອງໂຕຫນຶ່ງ ຫລື ກວາງຫນຸ່ມ; ເບິ່ງແມ, ລາວກຳລັງຢືນຢູ່ດ້ານຫລັງກຳແພງຂອງຂ້າພະເຈົ້າ, ການແນມເບິ່ງຜ່ານປ່ອງຢ້ຽມ,
ຄ່ອຍໆປະກົດຕົວຜ່ານຊ່ອງທາງນັ້ນ.
10ຄົນຮັກຂອງຂ້າພະເຈົ້າໄດ້ເວົ້າກັບຂ້າພະເຈົ້າວ່າ, “ຈົ່ງລຸກຂຶ້ນເຖີດ, ຄົນຮັກຂອງຂ້າພະເຈົ້າ, ຜູ້ງົດງາມທີ່ສຸດຂອງຂ້າພະເຈົ້າ, ມາກັບຂ້າພະເຈົ້າ
ເຖີດ.11ເບິ່ງແມ, ລະດູຫນາວຜ່ານພົ້ນໄປ; ລະດູຝົນເຊົາຕົກ ແລະ ຜ່ານພົ້ນໄປ.
12ດອກໄມ້ທັງຫລາຍໄດ້ປະກົດຢູ່ເທິງແຜ່ນດິນ; ເປັນເວລາສຳລັບການຕັດກິ່ງ ແລະ ສຽງຮ້ອງເພງຂອງນົກທັງຫລາຍໄດ້ມາຮອດແລ້ວ, ແລະ
ພວກເຮົາໄດ້ຍິນສຽງຂອງເຫລົ່ານົກກາງແກຢູ່ໃນແຜ່ນດິນຂອງພວກເຮົາ.13ຕົ້ນຫມາກເດື່ອໄດ້ໃຫ້ຫມາກ ສີຂຽວສຸກງອມ, ແລະ ຕົ້ນອະງຸ່ນທັງ
ຫລາຍກໍເບັ່ງບານ; ພວກມັນໄດ້ສົ່ງກິ່ນຫອມຂອງພວກມັນ. ລຸກຂຶ້ນເຖີດ, ຄົນຮັກຂອງຂ້າພະເຈົ້າ, ຜູ້ງົດງາມຂອງຂ້າພະເຈົ້າ, ແລະ ມາກັບຂ້າພະ
ເຈົ້າ.
14ແມ່ນົກເຂົາຂອງຂ້າພະເຈົ້າ, ຢູ່ໃນໂງ່ນຫີນ, ໃນໂງ່ນທີ່ລັບລີ້ຂອງພູຜາ, ຂໍໃຫ້ຂ້າພະເຈົ້າໄດ້ເຫັນໃບຫນ້າຂອງທ່ານ. ຂໍໃຫ້ຂ້າພະ
ເຈົ້າໄດ້ຍິນສຽງຂອງທ່ານ, ເພາະວ່າສຽງຂອງທ່ານຊ່າງມ່ວນ ແລະ ອ່ອນຫວານ, ແລະ ໃບຫນ້າຂອງທ່ານກໍຫນ້າຮັກ."
ຍິງນັ້ນກຳລັງເວົ້າກັບຕົວນາງເອງ
15ຈົ່ງຈັບຫມາຈອກມາໃຫ້ພວກຂ້າພະເຈົ້າ, ຫມາຈອກໂຕນ້ອຍທີ່ທຳລາຍສວນອະງຸ່ນ, ເພາະວ່າສວນອະງຸ່ນຂອງພວກຂ້າພະເຈົ້າກຳລັງເບັ່ງບານ.
16ຄົນຮັກຂອງຂ້າພະເຈົ້າເປັນຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າເປັນຂອງລາວ; ລາວປ່ອຍໃຫ້ຝູງສັດລ້ຽງກິນຫຍ້າຢູ່ທ່າມ
ກາງດອກລິນລີດ້ວຍຄວາມເບີກບານໃຈ. ຍິງນັ້ນກຳລັງເວົ້າກັບຄົນຮັກຂອງລາວ17ຟ້າວໄປເຖີດ, ຄົນຮັກຂອງຂ້າພະເຈົ້າ, ກ່ອນທີ່ຈະສາຍລົມພັດ
ໂຫວແຫ່ງຮຸ່ງອາລຸນ ແລະ ເງົາທັງຫລາຍຈະຈາງໄປ. ຟ້າວໄປເຖີດ; ຂໍຈົ່ງເປັນຄືກັບເຍືອງ ຫລື ກວາງຫນຸ່ມເທິງພູເຂົາອັນເຂັ້ມແຂງເຖີດ.

3 [1]ໃນຕອນກາງຄືນເທິງຕຽງນອນຂອງຂ້າພະເຈົ້າ ຂ້າພະເຈົ້າໄດ້ລໍຖ້າຄົນທີ່ຂ້າພະເຈົ້າຮັກ; ຂ້າພະເຈົ້າໄດ້ຊອກລາວ, ແຕ່ຂ້າພະເຈົ້າບໍ່ເຫັນ.[2]ຂ້າ
ພະເຈົ້າໄດ້ເວົ້າກັບຕົວເອງວ່າ, "ຂ້າພະເຈົ້າຈະລຸກຂຶ້ນ ແລະ ໄປທົ່ວເມືອງ, ໄປຕາມຫົນທາງ ແລະ ເດີນກ້ວາງທັງຫລາຍ; ຂ້າພະ
ເຈົ້າຊອກຫາຄົນຮັກຂອງຂ້າພະເຈົ້າ." ຂ້າພະເຈົ້າໄດ້ຊອກຫາລາວ, ແຕ່ຂ້າພະເຈົ້າບໍ່ພົບລາວ.

[3]ພວກຄົນເຝົ້າຍາມໄດ້ພົບກັບຂ້າພະເຈົ້າໃນຂະນະທີ່ພວກເຂົາກຳລັງກວດກາໃນເມືອງ. ຂ້າພະເຈົ້າຖາມພວກເຂົາວ່າ,
"ພວກທ່ານໄດ້ເຫັນຄົນຮັກຂອງຂ້າພະເຈົ້າຫລືບໍ?"[4]ໃນຂະນະດຽວເທົ່ານັ້ນຫລັງຈາກທີ່ຂ້າພະເຈົ້າໄດ້ຜ່ານພວກເຂົາມາ ຂ້າພະເຈົ້າໄດ້ພົບກັບຜູ້
ຫນຶ່ງທີ່ດວງໃຈຂອງຂ້າພະເຈົ້າຮັກ. ຂ້າພະເຈົ້າໄດ້ຈັບລາວໄວ້ ແລະ ຈະບໍ່ຍອມປ່ອຍໃຫ້ລາວໄປບ່ອນໃດຈົນກວ່າຂ້າພະ
ເຈົ້າຈະໄດ້ນຳລາວເຂົ້າມາໃນເຮືອນຂອງແມ່ຂອງຂ້າພະເຈົ້າ, ເຂົ້າມາໃນຫ້ອງນອນຂອງຜູ້ທີ່ໃຫ້ກຳເນີດຂ້າພະເຈົ້າ.
ຍິງນັ້ນກຳລັງເວົ້າກັບອີກຍິງອື່ນ
[5]ຂ້າພະເຈົ້າຕ້ອງການໃຫ້ພວກທ່ານສັນຍາ, ບັນດາລູກສາວຂອງບັນດາບັນພະບຸລຸດແຫ່ງນະຄອນ ເຢຣູຊາເລັມ, ໂດຍ ຝູງເຍືອງ ແລະ ເຫລົ່າ
ກວາງໂຕແມ່ໃນທົ່ງ, ທີ່ພວກທ່ານຈະບໍ່ລົບກວນຄວາມສຳພັນຮັກຂອງຂ້າພະເຈົ້າຈົນກວ່າມັນຈະຜ່ານໄປ. ຍິງສາວນັ້ນກຳລັງເວົ້າກັບຕົວນາງເອງ
[6]ສິ່ງທີ່ຈະຂຶ້ນມາຈາກຖິ່ນແຫ້ງແລ້ງກັນດານຄືກັບລຳຫມອກຄວັນ, ສິ່ງກິ່ນຫອມດ້ວຍຢາງໄມ້ຫອມ ແລະ ກຳຍານ, ດ້ວຍແປ້ງທັງ
ຫມົດທີ່ຂາຍໂດຍພໍ່ຄ້າ?[7]ເບິ່ງເຖີດ, ມັນຄືຕຽງນອນຂອງກະສັດໂຊໂລໂມນ; ນັກຮົບທັງຫົກສິບຄົນຢູ່ອ້ອມຮອບ, ເຫລົ່າທະຫານຫົກສິບຄົນຂອງອິ
ສະຣາເອນ.
[8]ພວກເຂົາຊ່ຽວຊານໃນເລື່ອງດາບ ແລະ ມີຄວາມຊຳນານໃນການສູ້ຮົບ. ຜູ້ຊາຍທຸກຄົນມີດາບຂອງເຂົາໄວ້ເຫນັບໂຕ, ມ
ີແຂນທີ່ຕໍ່ສູ້ກັບຄວາມເປັນຫນ້າຢ້ານກົວໃນເວລາກາງຄືນ.[9]ກະສັດໂຊໂລໂມນໄດ້ຊົງສ້າງພະບັນລັງຂອງພະ
ອົງຈາກຕົ້ນໄມ້ໃຫຍ່ແຫ່ງເລບານອນເພື່ອພະອົງເອງ.
[10]ເສົາຂອງມັນເຮັດຈາກເງິນ; ດ້ານຫລັງແມ່ນເຮັດດ້ວຍທອງຄຳ, ແລະ ບ່ອນນັ່ງຊົງໃຊ້ຜ້າສີມ່ວງ. ມຸມພາຍໃນຊົງຖືກປະດັບປະດາດ້ວຍຄວາມ
ຮັກໂດຍບັນດາລູກສາວຂອງບັນພະບຸລຸດແຫ່ງນະຄອນ ເຢຣູຊາເລັມ. ຍິງສາວນັ້ນກຳລັງເວົ້າກັບຍິງແຫ່ງເມືອງເຢຣຸຊາເລັມ[11]ຟ້າວໄປເຖີດ, ບັນດາ
ລູກສາວແຫ່ງບັນພະບຸລຸດຂອງຊີໂອນ, ແລະ ຈົ່ງຫລຽວເບິ່ງກະສັດໂຊໂລໂມນ, ຜູ້ເຊິ່ງກຳລັງສວມໃສ່ມົງກຸດທີ່ມານດາຂອງພະອົງໄດ້ໃສ່ໃຫ້ແກ່ພ
ະອົງໃນວັນແຕ່ງງານ, ໃນວັນແຫ່ງຄວາມສຸກໃນຊີວິດຂອງພະອົງ.

4 [1]ໂອ, ເຈົ້າຊ່າງງົດງາມ, ຄົນຮັກຂອງຂ້ອຍ; ເຈົ້າງົດງາມເຫລືອຫລາຍ.
ດວງຕາຂອງເຈົ້າປຽບເຫມືອນດັ່ງດວງຕາຂອງນົກກາງແກທີ່ຢູ່ທາງຫລັງຜ້າຄຸມຫນ້າຂອງນາງ. ເສັ້ນຜົມຂອງນາງເປັນຄືຝູງແບ້ກຳລັງລົງໄປຈາກພູກີເລອາດ.

[2]ແຂ້ວຂອງນາງເປັນຄືກັບຝູງແກະໂຕແມ່ທີ່ຫາກໍຕັດຂົນໃຫມ່ອອກ, ມາຈາກສະຖານທີ່ຊະລ້າງ. ແຕ່ລະໂຕມີຝາແຝດ, ແລະ ບໍ່ມີຈັກໂຕໃນພວກມັນທີ່ຖືກເຮັດໃຫ້ສູນເສຍໄປ.
[3]ຮີມສົບຂອງນາງປຽບເຫມືອນລູກຕຸ້ມສີແດງ; ປາກຂອງນາງຊ່າງຫນ້າຮັກ. ແກ້ມຂອງນາງກໍຄ້າຍຄືກັບຫມາກພິລາເຄິ່ງປ່ຽງຢູ່ດ້ານຫລັງຜ້າຄຸມຫນ້າຂອງນາງ.
[4]ລຳຄໍຂອງນາງຄ້າຍຄືຫໍຄອຍຂອງດາວິດທີ່ຖືກສ້າງດ້ວຍຫີນຈັດວາງເປັນແຖວ, ພ້ອມດ້ວຍແຜ່ນຈາລຶກຫລາຍພັນແຜ່ນທີ່ວາງເທິງນັ້ນ,
ຄືແຜ່ນຈາລຶກທັງຫມົດຂອງເຫລົ່າທະຫານ. [5]ເຕົ້ານົມທັງສອງຂ້າງຂອງນາງເປັນຄືກັນກັບລູກກວາງສອງໂຕ, ຄືກັນກັບເຍືອງຝາແຝດ, ທີ່ເລັມກິນຫຍ້າຢູ່ທ່າມກາງສວນລິນລີ.
[6]ຈົນກ່ວາຮຸ່ງເຊົ້າຈະມາເຖິງ ແລະ ເງົາທັງຫລາຍຈະຈາງໄປ, ຂ້ອຍຈະຂຶ້ນໄປເທິງພູເຂົາແຫ່ງຢາງໄມ້ຫອມ ແລະ ໄປທີ່ໂນນພູແຫ່ງກຳຍານ.
[7]ເຈົ້າຊ່າງງົດງາມໃນທຸກດ້ານ, ທີ່ຮັກຂອງຂ້ອຍ ແລະ ບໍ່ມີສິ່ງໃດທີ່ຫນ້າຕຳນິພາຍໃນໂຕເຈົ້າ.
[8]ເຈົ້າສາວຂອງຂ້ອຍ. ມາກັບຂ້ອຍຈາກເລບານອນເຖີດ. ຂໍມາກັບຂ້ອຍຈາກເລບານອນ; ມາຈາກທີ່ສູງທີ່ສຸດຂອງອາມານາ,
ຈາກຈຸດສູງສຸດຂອງເສນີ ແລະ ເຮີໂມນ, ຈາກຖ້ຳຂອງເຫລົ່າຣາຊະສີສິງ, ຈາກພູເຂົາທີ່ເປັນຖ້ຳເສືອດາວທັງຫລາຍ.
[9]ເຈົ້າໄດ້ລັກຫົວໃຈຂອງຂ້ອຍໄປແລ້ວ, ນ້ອງສາວຂອງຂ້ອຍ, ເຈົ້າສາວຂອງຂ້ອຍ, ເຈົ້າໄດ້ລັກຫົວໃຈຂ້ອຍໄປ,
ໂດຍການເບິ່ງຂ້ອຍພຽງແຕ່ຄັ້ງດຽວ, ດ້ວຍເພັດຫນຶ່ງເມັດທີ່ຢູ່ເທິງລຳຄໍຂອງເຈົ້າ.
[10]ຄວາມຮັກຂອງເຈົ້າຊ່າງງົດງາມເຫລືອເກີນ, ນ້ອງສາວຂອງຂ້ອຍ, ເຈົ້າສາວຂອງຂ້ອຍ! ຄວາມຮັກຂອງເຈົ້າກໍດີກວ່າເຫລົ້າອະງຸ່ນຫລວງຫລາຍ,
ແລະ ກິ່ນນ້ຳຫອມຂອງເຈົ້າກໍຫອມກວ່າກິ່ນເຄື່ອງເທດໃດໆ. [11]ເຈົ້າສາວຂອງຂ້ອຍ, ຮີມສົບຂອງນາງ, ເປັນຢອດນ້ຳເຜິ້ງ; ຄືນ້ຳເຜິ້ງ ແລະ ນ້ຳນົມທີ່
ຢູ່ພາຍໃຕ້ລີ້ນຂອງນາງ; ກິ່ນຫອມຂອງເສື້ອຜ້າຂອງນາງຄ້າຍຄືກິ່ນຫອມແຫ່ງເລບານອນ.
[12]ນ້ອງສາວຂອງຂ້ອຍ, ເຈົ້າສາວຂອງຂ້ອຍເປັນດັ່ງສວນທີ່ຫວງຫ້າມ, ເປັນສວນທີ່ປິດກັ້ນເອົາໄວ້, ເປັນນ້ຳພຸທີ່ຖືກປະທັບຕາປິດໄວ້. [13]ກິ່ງຕ່າງໆຂອງ
ເຈົ້າເປັນດັ່ງກັບສວນຕົ້ນຫມາກພິລາ, ທີ່ມີຫມາກລົດຊາດດີເລີດຢ່າງຫລວງຫລາຍ ແລະ ມີຕົ້ນຫຽນກັບນາຣະດາ, [14]ມີໄມ້ຫອມ ແລະ
ຕົ້ນໄມ້ອີ້ຫອມ, ຕົ້ນໃບເຕີຍ ແລະ ອົບເຊີຍ, ພ້ອມກັບເຄື່ອງຫອມທຸກຊະນິດ, ຢາງໄມ້ຫອມ ແລະ ຫວ້ານຫາງແຂ້ພ້ອມກັບເຄື່ອງຫອມທີ່ດີທີ່ສຸດ.
[15]ເຈົ້າເປັນຄືກັນກັບສວນນ້ຳພຸ, ບໍ່ນ້ຳດື່ມທີ່ສົດຊື່ນ, ແມ່ນ້ຳທີ່ກຳລັງໄຫລລົງມາຈາກເລບານອນ. ຍິງສາວກຳລັງເວົ້າກັບທີ່ຮັກຂອງນາງ [16]ຕື່ນເຖີດ,
ລົມທິດເຫນືອ; ມາເຖີດ, ລົມທິດໃຕ້; ພັດເຂົ້າມາໃນສວນຂອງຂ້າພະເຈົ້າເພື່ອວ່າເຄື່ອງຫອມຂອງມັນຈະສົ່ງກິ່ນຫອມໄປທົ່ວ.
ຂໍໃຫ້ຄົນຮັກຂອງຂ້າພະເຈົ້າເຂົ້າມາໃນສວນຂອງລາວ. ແລະ ກິນຫມາກໄມ້ລົດຊາດທີ່ດີທີ່ສຸດຂອງມັນເຖີດ.

5 [1]ຂ້ອຍໄດ້ເຂົ້າມາໃນສວນຂອງຂ້ອຍແລ້ວ, ນ້ອງສາວຂອງຂ້ອຍເອີຍ, ເຈົ້າສາວຂອງຂ້ອຍ; ຂ້ອຍໄດ້ທ້ອນໂຮມຢາງໄມ້ຫອມພ້ອມກັບເຄື່ອງ
ຫອມຂອງຂ້ອຍ. ຂ້ອຍໄດ້ກິນຮັງເຜີ້ງກັບນໍ້າເຜີ້ງຂອງຂ້ອຍ; ຂ້ອຍໄດ້ດື່ມເຫລົ້າອະງຸ່ນພ້ອມກັບນໍ້ານົມຂອງຂ້ອຍ. ຫມູ່ກຳລັງເວົ້າກັບຄົນຮັກ,
ຈົ່ງກິນ ແລະ ດື່ມສາ ສຸດທີ່ຮັກຂອງຂ້ອຍ ຈົນກວ່າເມົາໃນຄວາມຮັກ. ຍິງຫນຸ່ມກຳລັງເວົ້າກັບຕົວນາງເອງ

[2]ຂ້າພະເຈົ້າໄດ້ນອນຫລັບໄປ, ແຕ່ຫົວໃຈຂອງຂ້າພະເຈົ້າຍັງຄົງຕື່ນຢູ່ໃນຄວາມຝັນ. ມີສຽງເຄາະປະຕູຂອງຄົນຮັກຂອງຂ້າພະເຈົ້າ ແລະ
ມີສຽງເວົ້າວ່າ, “ເປີດປະຕູໃຫ້ຂ້ອຍເຖີດ, ນ້ອງສາວຂອງຂ້ອຍ, ແມ່ນົກກາງແກຂອງຂ້ອຍ, ຜູ້ທີ່ບໍລິສຸດຂອງຂ້ອຍ,
ເພາະວ່າຫົວຂອງຂ້ອຍກໍປຽກໄປດ້ວຍນໍ້າຫມອກ, ເສັ້ນຜົມຂອງຂ້ອຍຊຸ່ມໄປດ້ວຍລະອອງນໍ້າໃນຍາມກາງຄືນ."
[3]“ຂ້າພະເຈົ້າໄດ້ແກ້ເສື້ອຄຸມຂອງຂ້າພະເຈົ້າອອກແລ້ວ; ຂ້າພະເຈົ້າຕ້ອງໃສ່ມັນກັບເຂົ້າໄປອີກຫລືບໍ? ຂ້າພະເຈົ້າລ້າງຕີນ ຂອງຂ້າພະເຈົ້າແລ້ວ;
ຂ້າພະເຈົ້າຕ້ອງເຮັດໃຫ້ຕີນຂອງຂ້າພະເຈົ້າເປື້ອນອີກຫລືບໍ?”[4]ຄົນຮັກຂອງຂ້າພະເຈົ້າເອົາມືເຂົ້າມາເພື່ອເປີດໄລປະຕູ, ແລະ ຫົວໃຈຂອງຂ້າພະ
ເຈົ້າກໍຮ້ອນຮົນເພາະລາວ.
[5]ຂ້າພະເຈົ້າໄດ້ລຸກຢືນຂຶ້ນເພື່ອເປີດປະຕູໃຫ້ຄົນຮັກຂອງຂ້າພະເຈົ້າ; ມືຂອງຂ້າພະເຈົ້າປຽກຊຸ່ມໄປດ້ວຍຢາງໄມ້ຫອມ,
ນິ້ວມືຂອງຂ້າພະເຈົ້າຊຸ່ມຊື່ນດ້ວຍຢາງໄມ້ຫອມ, ເມື່ອຂ້າພະເຈົ້າຈັບທີ່ປະຕູນັ້ນ.
[6]ຂ້າພະເຈົ້າໄດ້ເປີດປະຕູໃຫ້ກັບຄົນຮັກຂອງຂ້າພະເຈົ້າ, ແຕ່ຄົນຮັກຂອງຂ້າພະເຈົ້າໄດ້ຫນີໄປແລ້ວ. ຂ້າພະເຈົ້າຕົກຕະລຶງ; ຂ້າພະ
ເຈົ້າບໍ່ມີຄວາມຫວັງເລີຍ. ຂ້າພະເຈົ້າໄດ້ຊອກຫາລາວ, ແຕ່ຂ້າພະເຈົ້າກໍຫາບໍ່ພົບລາວ; ຂ້າພະເຈົ້າໄດ້ເອີ້ນຫາລາວ, ແຕ່ລາວກໍບໍ່ຕອບຂ້າພະເຈົ້າ.
[7]ພວກຄົນຍາມທີ່ເຝົ້າກວດກາອ້ອມເມືອງ ໄດ້ພົບຂ້າພະເຈົ້າ; ພວກເຂົາໄດ້ທຸບຕີ ແລະ ທຳຮ້າຍຂ້າພະເຈົ້າ; ພວກຄົນຍາມທີ່ເຝົ້າຢູ່ເທິງກຳ
ແພງກໍໄດ້ເອົາເສື້ອຄຸມຂອງຂ້າພະເຈົ້າໄປ. ຍິງສາວກຳລັງເວົ້າກັບຍິງໃນເມືອງນັ້ນ
[8]ຂ້າພະເຈົ້າຕ້ອງການຄຳສັນຍາ, ບັນດາລູກສາວແຫ່ງນະຄອນ ເຢຣູຊາເລັມ, ຖ້າຫາກພວກທ່ານເຫັນຄົນຮັກຂອງຂ້າພະເຈົ້າ, ບອກລາວວ່າຂ້າພ
ະເຈົ້າກຳລັງເຈັບປ່ວຍຍ້ອນຄວາມຮັກຂອງຂ້າພະເຈົ້າທີ່ມີຕໍ່ລາວ. ຍິງໃນເມືອງນັ້ນກຳລັງເວົ້າກັບຍິງສາວ
[9]ຄົນຮັກຂອງເຈົ້າດີກ່ວາຜູ້ຊາຍຜູ້ເປັນຄົນຮັກຂອງຄົນອື່ນແນວໃດ, ເຈົ້າເປັນຜູ້ງົດງາມໃນບັນດາຍິງສາວທັງຫລາຍ? ເປັນຫຍັງຄົນຮັກຂອງເຈົ້າຈ
◌ິ່ງດີກ່ວາຄົນຮັກຂອງຄົນອື່ນ, ທີ່ເຈົ້າຈຶ່ງຂໍຮ້ອງພວກເຮົາໃຫ້ສັນຍາເຊັ່ນນີ້? ຍິງສາວກຳລັງເວົ້າກັບຍິງໃນເມືອງນັ້ນ
[10]ທີ່ຮັກຂອງຂ້າພະເຈົ້າສະຫງ່າງາມ ແລະ ຜິວແດງກ່ຳ, ໂດດເດັ່ນໃນທ່າມກາງຄົນນັບສິບພັນ.[11]ຫົວຂອງເຂົາເປັນຄືກັບທອງຄຳທີ່ບໍລິສຸດທີ່ສຸດ;
ເສັ້ນຜົມຂອງເຂົາຫຍິກງໍ ແລະ ເປັນສີດຳຄ້າຍຄືກັບກາ.
[12]ດວງຕາຂອງເຂົາ ຄ້າຍຄືດວງຕາຂອງນົກກາງແກທີ່ຢູ່ຂ້າງກະແສນໍ້າ, ອາບດ້ວຍນໍ້ານົມ, ຍຶດຕິດໄວ້ຄ້າຍຄືເພັດ.
[13]ແກ້ມຂອງເຂົາປຽບເຫມືອນກັບແທ່ນເຄື່ອງຫອມ, ມີກິ່ນຫອມຂອງພືດພັນ. ຮີມສົບຂອງເຂົາປຽບເຫມືອນສວນລິນລີ່, ຍ້ອຍດ້ວຍຢາງໄມ້ຫອມ.
[14]ແຂນຂອງເຂົາປຽບເຫມືອນທອງຄຳລ້ອມຮອບດ້ວຍເພັດ; ທ້ອງຂອງທ່ານຄ້າຍຄືງາຊ້າງອ້ອມຮອບດ້ວຍໄພລິນ.
[15]ຂາຂອງເຂົາຄືກັບເສົາຫີນອ່ອນ, ມີຖານເປັນທອງຄຳ ບໍຣິສຸດ; ຮູບລັກສະນະຂອງເຂົາຄືກັບເລບານອນ, ດັ່ງກັບຕົ້ນແປກທີ່ດີສວຍງາມ.
[16]ປາກຂອງເຂົາແມ່ນຫວານທີ່ສຸດ; ເຂົາເປັນຄົນທີ່ຫນ້າຮັກໂດຍແທ້. ນີ້ຄືຄົນຮັກຂອງຂ້າພະເຈົ້າ, ແລະ ນີ້ຄືຫມູ່ຂອງຂ້າພະເຈົ້າ, ບັນດາລູກສາວ
ແຫ່ງນະຄອນ ເຢຣູຊາເລັມ.

 generated on Tue Jun 17 19:01:42 2025

# 6

[1]ຄົນຮັກຂອງນາງໄປຢູ່ໃສຫລື, ຜູ້ທີ່ງາມທີ່ສຸດໃນທ່າມກາງຍິງສາວທັງຫລາຍ? ຄົນຮັກຂອງເຈົ້າໄປທາງທິດໃດແລ້ວ, ເພື່ອພວກເຮົາຈະໄດ້ຊອກ
ຫາລາວຮ່ວມກັນກັບເຈົ້າໄດ້? ຍິງສາວເວົ້າກັບຕົວເອງ

[2]ຄົນຮັກຂອງຂ້າພະເຈົ້າໄດ້ລົງໄປທີ່ສວນຂອງລາວ, ໄປທີ່ແທ່ນບູຊາເຄື່ອງຫອມ, ເພື່ອພາສັດໄປກິນຫຍ້າຢູ່ໃນສວນ ແລະ ເກັບດອກລິນລີ.[3]ຂ້າພະ
ເຈົ້າເປັນຂອງຄົນຮັກຂອງຂ້າພະເຈົ້າ, ແລະ ຄົນຮັກຂອງຂ້າພະເຈົ້າກໍເປັນຂອງຂ້າພະເຈົ້າ; ລາວໄດ້ພາສັດໄປກິນຫຍ້າໃນທ່າມ
ກາງປ່າລິນລີດ້ວຍຄວາມມ່ວນຊື່ນ. ຄົນຮັກຂອງຍິງເວົ້າກັບນາງ
[4]ເຈົ້າເປັນຄົນທີ່ງົດງາມຄືກັບເມືອງ ຕີຣະຊາ, ຄົນຮັກຂອງຂ້ອຍເອີຍ, ຫນ້າຮັກຄືກັບນະຄອນ ເຢຣູຊາເລັມ, ດົນໃຈຢ່າງຫນ້າເກງ
ຂາມຄືກັບກອງທັບທີ່ມີທຸງປະດັບ.
[5]ຂໍຈົ່ງປ່ອຍວາງສາຍຕາຂອງເຈົ້າໄປຈາກຂ້ອຍເຖີດ, ເພາະມັນເຮັດໃຫ້ຂ້ອຍສັບສົນ. ເສັ້ນຜົມຂອງເຈົ້າຄືກັບຝູງແບ້ທີ່ກໍາລັງລົງມາຈາກເນີນພູກີເລ
ອາດ.
[6]ແຂ້ວຂອງນາງຄືກັບຝູງແກະໂຕແມ່ທີ່ກໍາລັງຂຶ້ນມາຈາກສະຖານທີ່ຊໍາລະລ້າງ. ແຕ່ລະໂຕມີລູກແຝດ, ແລະ ບໍ່ມີໂຕໃດໃນພວກມັນຖືກເຮັດ
ໃຫ້ສູນເສຍໄປ.[7]ແກ້ມຂອງເຈົ້າຄືກັບຫມາກພິລາຜ່າເຄິ່ງປ່ຽງທີ່ຢູ່ດ້ານຫລັງຜ້າຄຸມຫນ້າຂອງນາງ. ຄົນຮັກຂອງນາງກໍາລັງເວົ້າກັບເຂົາເອງ
[8]ມີຣາຊິນີຫົກສິບຄົນ, ມີເມຍນ້ອຍອີກແປດສິບຄົນ, ແລະ ຍິງສາວອີກຫລວງຫລາຍທີ່ນັບບໍ່ຖ້ວນ.[9]ແມ່ນົກກາງແກຂອງຂ້ອຍ, ນາງຜູ້ທີ່ບໍ່ມີ
ທີ່ຕິຕຽນ, ນາງເປັນຜູ້ດຽວ, ນາງເປັນລູກສາວຄົນພິເສດຂອງແມ່ຂອງນາງ; ນາງເປັນທີ່ໂປດປານແກ່ຜູ້ຍິງທີ່ໃຫ້ກໍາເນີດນາງ. ບັນດາ
ລູກສາວແຫ່ງປະຊາກອນໃນປະເທດຂອງຂ້ອຍໄດ້ເຫັນນາງ ແລະ ເອີ້ນນາງວ່າຜູ້ໄດ້ຮັບພຣະພອນ; ພະຣາຊິນີທັງຫລາຍ ແລະ ເມຍນ້ອຍທັງ
ຫລາຍໄດ້ເຫັນນາງດ້ວຍເຊັ່ນກັນ, ແລະ ພວກເຂົາກໍໄດ້ຍ້ອງຍໍນາງ: ພະຣາຊິນີທັງຫລາຍ ແລະ ເມຍນ້ອຍທັງຫລາຍໄດ້ກ່າວວ່າ
[10]“ໃຜຄືຜູ້ນີ້ທີ່ປະກົດຕົວຄ້າຍຄືຮຸ່ງອາລຸນຕອນເຊົ້າ, ງົດງາມຄືດັ່ງດວງຈັນ, ສະຫວ່າງຄືກັບດວງອາທິດ, ດົນໃຈຢ່າງຫນ້າເກງຂາມ
ຄືກັບກອງທັບທີ່ປະດັບດ້ວຍທຸງຫລື? ຄົນຮັກຂອງນາງເວົ້າກັບຕົນເອງ
[11]ຂ້າພະເຈົ້າລົງໄປທີ່ສວນຕົ້ນຖົ່ວເພື່ອເບິ່ງຕົ້ນອ່ອນເຕີບໃຫຍ່ຢູ່ໃນຮ່ອມພູນັ້ນ, ເພື່ອເບິ່ງເຄືອອະງຸ່ນແຕກຍອດ, ແລະ ດອກຫມາກພິລາເບັ່ງບານ.
[12]ຂ້າພະເຈົ້າມີຄວາມສຸກຫລາຍທີ່ຂ້າພະເຈົ້າຮູ້ສຶກວ່າຂ້າພະເຈົ້າກໍາລັງຂີ່ລົດມ້າຂອງເຈົ້າຊາຍອົງຫນຶ່ງ. ຄົນຮັກຂອງນາງເວົ້າກັບນາງ
[13]ຫລຽວກັບໄປ, ຫລຽວກັບໄປເຖີດ, ເຈົ້າຜູ້ເປັນຍິງທີ່ດີພ້ອມ; ຂໍໃຫ້ຫລຽວກັບໄປ, ຫລຽວກັບໄປເຖີດ ເພື່ອວ່າຂ້າພະເຈົ້າຈະໄດ້ເບິ່ງເຈົ້າ.
ຍິງສາວກໍາລັງເວົ້າເຖິງຄົນຮັກຂອງນາງ ເປັນຫຍັງພວກເຈົ້າຈຶ່ງຢາກເບິ່ງຂ້ອຍ, ຍິງທີ່ພຽບພ້ອມ,
ຂ້ອຍກໍາລັງຟ້ອນລໍາໃນທ່າມກາງຄົນຟ້ອນສອງແຖວ.

 generated on Tue Jun 17 19:01:42 2025

7 [1]ຕີນຂອງເຈົ້າທີ່ຢູ່ໃນເກີບສາຍພາຍນັ້ນແມ່ນງົດງາມເຫລືອເກີນ, ບຸດສາວຂອງເຈົ້າຊາຍເອີຍ! ຕົ້ນຂາຂອງເຈົ້າຊ່າງໂຄ້ງງາມຄືກັບເພັດ,
ດັ່ງສີມືຂອງຊ່າງຜູ້ຊ່ຽວຊານ.

[2]ສາຍບືຂອງເຈົ້າຄືກັບອ່າງວົງມົນ; ທີ່ເຫລົ້າອະງຸ່ນປະສົມແລ້ວມີບໍ່ເຄີຍຂາດຈັກເທື່ອ. ຫນ້າທ້ອງຂອງເຈົ້າ
ຄືກັບກອງເຂົ້າສາລີທີ່ຖືກອ້ອມຮອບດ້ວຍດອກລີ້ນລີ່ມີຢູ່ຫລວງຫລາຍ.
[3]ເຕົ້ານົມທັງສອງຂອງເຈົ້າຄືກັນກັບລູກກວາງນ້ອຍສອງໂຕ, ຄືກັນກັບເຍືອງແຝດ.[4]ລໍາຄໍຂອງນາງຄືກັບຫໍຄອຍງາຊ້າງ;
ດວງຕາຂອງນາງຄືກັບສະນ້ໍາໃນເມືອງເຮັດຊະໂບນທີ່ປະຕູເມືອງບັດຣັບບິມ. ດັງຂອງເຈົ້າຄືກັບຫໍຄອຍໃນເລບານອນທີ່ປິ່ນໄປ
ທາງເມືອງດາມັສກັດ.
[5]ຫົວຂອງເຈົ້າຄືກັບອູດ; ເສັ້ນຜົມຂອງເຈົ້າເປັນສີມ່ວງເຂັ້ມ. ຣາຊາຖືກຈັບໃຫ້ເປັນຊະເລີຍໂດຍຜົມເປຍນັ້ນ.[6]ທີ່ຮັກ, ເຈົ້າງົດງາມ ແລະ ຫນ້າຮັກ
ເຫລືອເກີນ, ໃນຄວາມສົດໃສຂອງເຈົ້າ!
[7]ຮູບຮ່າງຂອງເຈົ້ານັ້ນສູງສະງ່າງາມຄືກັບຕົ້ນຕານ, ແລະ ເຕົ້ານົມຂອງເຈົ້າຄືກັບພວງຫມາກໄມ້.[8]ຂ້ອຍຄິດ, “ຂ້ອຍຢາກ
ປີນຂຶ້ນໄປເທິງຕົ້ນຕານນັ້ນ; ຂ້ອຍຈະຈ່ອງງ່າໄມ້ຂອງມັນ.” ຂໍໃຫ້ເຕົ້ານົມຂອງນາງເປັນຄືພວງຫມາກອະງຸ່ນ. ແລະ ຂໍ
ໃຫ້ກິ່ນຫອມຂອງດັງຂອງເຈົ້າຫອມຫວນດັ່ງຫມາກຈອງ.
[9]ຂໍໃຫ້ປາກຂອງເຈົ້າເປັນຄືເຫລົ້າອະງຸ່ນທີ່ດີທີ່ສຸດ, ໄຫລລິນຢ່າງຄ່ອງແຄ້ວເຖິງຄົນຮັກຂອງຂ້າພະເຈົ້າ, ໄຫລລິນລົງມາເຖິງຮີມສົບ ແລະ
ແຂ້ວຂອງພວກເຮົາ. ຍິງສາວເວົ້າກັບທີ່ຮັກຂອງເຂົາ
[10]ຂ້າພະເຈົ້າເປັນກໍາມະສິດຂອງຄົນຮັກຂອງຂ້າພະເຈົ້າ, ແລະ ເຂົາປາຖະຫນາຂ້າພະເຈົ້າ.[11]ມາເຖີດ, ຄົນຮັກຂອງຂ້າພະເຈົ້າ,
ຂໍໃຫ້ພວກເຮົາອອກໄປທີ່ຊົນນະບົດ; ຂໍໃຫ້ພວກເຮົາໃຊ້ເວລາກາງຄືນທັງຫມົດໃນຫມູ່ບ້ານເຫລົ່ານັ້ນ.
[12]ຂໍໃຫ້ພວກເຮົາລຸກແຕ່ເຊົ້າເພື່ອໄປທີ່ສວນອະງຸ່ນ; ຂໍໃຫ້ພວກເຮົາເບິ່ງເຫັນເຄືອແຕກຍອດ, ໄດ້ເຫັນການເບັ່ງບານຂອງພວກມັນ, ແລະ ຫມາກພິ
ລາທີ່ຢູ່ໃນດອກໄມ້. ຢູ່ທີ່ນັ້ນຂ້າພະເຈົ້າຈະມອບຄວາມຮັກຂອງຂ້າພະເຈົ້າໃຫ້ແກ່ທ່ານ.
[13]ພືດພັນສົ່ງກິ່ນຫອມຫວນ; ຢູ່ປະຕູທີ່ພວກເຮົາກໍາລັງພັກອາໃສຢູ່ນັ້ນກໍມີຫມາກໄມ້ທີ່ດີທີ່ສຸດທຸກຊະນິດ, ທັງໃຫມ່ ແລະເກົ່າ, ທີ່ຂ້າພະ
ເຈົ້າໄດ້ເກັບສະສົມເອົາໄວ້ເພື່ອທ່ານ, ຄົນຮັກຂອງຂ້າພະເຈົ້າ.


generated on Tue Jun 17 19:01:42 2025

8 [1]ຂ້າພະເຈົ້າປາຖະໜາໃຫ້ທ່ານເປັນຄືກັນກັບອ້າຍຂອງຂ້າພະເຈົ້າ, ຄົນທີ່ໄດ້ຮັບການລ້ຽງດູຈາກນົມຂອງແມ່ຂອງຂ້າພະເຈົ້າ. ຫລັງຈາກນັ້ນ
ເມື່ອຂ້າພະເຈົ້າໄດ້ພົບທ່ານຢູ່ທາງນອກ, ຂ້າພະເຈົ້າຈະສາມາດຈູບທ່ານ, ແລະ ບໍ່ມີໃຜສາມາດຫມິ່ນປະຫມາດຂ້າພະເຈົ້າໄດ້.

[2]ຂ້າພະເຈົ້າຈະນໍາ ແລະ ພາທ່ານເຂົ້າມາໃນເຮືອນຂອງແມ່ຂອງຂ້າພະເຈົ້າ, ແລະ ທ່ານຈະສອນຂ້າພະເຈົ້າ. ຂ້າພະເຈົ້າຈະມອບເຫລົ້າອະງຸ່ນ
ແລະ ນ້ຳຫມາກພິລາໃຫ້ທ່ານດື່ມ. ຍິງສາວເວົ້າເຖິງນາງເອງ[3]ມືຊ້າຍຂອງລາວວາງຢູ່ກ້ອງຫົວຂອງຂ້າພະເຈົ້າ ແລະ ມືຂວາຂອງລາວກໍກອດຂ້າ
ພະເຈົ້າ. ຍິງນັ້ນເວົ້າກັບຍິງອື່ນ
[4]ຂ້າພະເຈົ້າຕ້ອງການໃຫ້ພວກທ່ານສັນຍາ, ລູກຍິງຂອງບັນພະບູລຸດແຫ່ງນະຄອນ ເຢຣູຊາເລັມທັງຫລາຍ, ທີ່
ພວກທ່ານຈະບໍ່ລົບກວນຄວາມສໍາພັນຮັກຂອງຂ້າພະເຈົ້າຈົນກວ່າມັນຈະຜ່ານໄປ. ຍິງນະຄອນເຢຣູຊາເລັມເວົ້າວ່າ
[5]ຜູ້ນີ້ແມ່ນໃຜທີ່ອອກມາຈາກຖິ່ນທຸລະກັນດານ, ທີ່ມາກັບຄົນຮັກຂອງນາງ? ຍິງສາວເວົ້າກັບຄົນຮັກຂອງນາງ ຂ້າພະເຈົ້າໄດ້ປຸກທ່ານຢູ່ກ້ອງຕົ້ນ
ຫມາກຈອງ; ຢູ່ທີ່ນັ້ນແມ່ຂອງທ່ານໄດ້ຖືພາທ່ານ; ຢູ່ທີ່ນັ້ນນາງໄດ້ໃຫ້ກໍາເນີດທ່ານ.
[6]ຂໍໃຫ້ຕັ້ງຂ້າພະເຈົ້າໄວ້ເປັນດັ່ງກາປະທັບທີ່ຫົວໃຈຂອງທ່ານ, ຄືກາປະທັບທີ່ເທິງແຂນຂອງທ່ານ, ເພາະວ່າຄວາມຮັກ
ນັ້ນເຂັ້ມແຂງຄືກັບຄວາມຕາຍ. ຄວາມເຊື່ອອັນແຮງກ້າເປັນຄ້າຍຄືແດນແຫ່ງຄົນຕາຍທີ່ບໍ່ເຄີຍສິ້ນສຸດ; ແປວໄຟຂອງມັນກໍໄດ້ລະເບີດອອກ;
ມັນເປັນໄຟທີ່ຮຸນແຮງ, ໄຟທີ່ຮ້ອນກວ່າໄຟໃດໆ.
[7]ນ້ຳທີ່ເພີ່ມຂຶ້ນຢ່າງກະທັນຫັນບໍ່ສາມາດດັບໄຟແຫ່ງຄວາມຮັກໄດ້, ຫລື ນ້ຳຖ້ວມກໍບໍ່ສາມາດພັດພາມັນໄປໄດ້. ຖ້າຜູ້ຊາຍທີ່ຍອມມອບຊັບສິນ
ບັດທັງຫມົດໃນບ້ານຂອງຕົນເພື່ອແລກກັບຄວາມຮັກ. ຂໍ້ສະເຫນີນັ້ນກໍຈະເປັນທີ່ບໍ່ຄວນເຄົາລົບຢ່າງຍິ່ງ. ອ້າຍຂອງບັນດາຍິງສາວກ່າວຕໍ່ກັນ
[8]ພວກຂ້າພະເຈົ້າມີນ້ອງສາວນ້ອຍໆ, ແລະ ເຕົ້ານົມຂອງນາງບໍ່ໃຫຍ່ເຕັມທີ່. ພວກເຮົາສາມາດເຮັດສິ່ງໃດເພື່ອນ້ອງສາວຂອງພວກເຮົາໃນມື້
ທີ່ນາງຈະຮັບຄໍາສັນຍາໃນການແຕ່ງງານຫລື?
[9]ຖ້າຫາກວ່ານາງເປັນກໍາແພງ, ຂ້າພະເຈົ້າຈະສ້າງຫໍຄອຍເງິນຢູ່ເທິງນາງ. ຖ້າຫາກວ່ານາງເປັນປະຕູ, ຂ້າພະເຈົ້າຈະປະດັບນາງດ້ວຍໄມ້ສົນ. ຍິງ
ສາວກໍາລັງເວົ້າກັບຕົວນາງເອງ
[10]ຂ້າພະເຈົ້າເປັນກໍາແພງ, ແຕ່ເຕົ້ານົມຂອງຂ້າພະເຈົ້າຄ້າຍຄືຫໍຄອຍທີ່ເປັນປ້ອມປາການໃນເວລານີ້; ດັ່ງນັ້ນຂ້າພະເຈົ້າຈຶ່ງເຕີບໃຫຍ່ຂຶ້ນເປັນຜູ້
ໃຫຍ່ຢ່າງເຕັມທີ່ແລ້ວໃນສາຍຕາຂອງທ່ານ.
[11]ໂຊໂລໂມນມີສວນອະງຸ່ນແຫ່ງຫນຶ່ງຢູ່ທີ່ບາອານຮາໂມນ. ເຂົາໄດ້ເອົາໃຫ້ຄົນເຊົ່າ ທີ່ຈະເບິ່ງແຍງຮັກສາສວນອະງຸ່ນນັ້ນ.
ແຕ່ລະຄົນຕ້ອງນໍາຫນຶ່ງພັນມາແລກປ່ຽນກັບຫມາກຂອງມັນ.[12]ສວນອະງຸ່ນຂອງຂ້າພະເຈົ້າກໍເປັນຂອງຂ້າພະເຈົ້າ;
ເງິນຫນຶ່ງພັນນັ້ນເປັນຂອງທ່ານ, ໂຊໂລໂມນຜູ້ທີ່ເປັນທີ່ຮັກຂອງຂ້າພະເຈົ້າ, ແລະ ເງິນສອງຮ້ອຍເປັນຂອງຄົນເຫລົ່ານັ້ນຜູ້ທີ່ໄດ້ເບິ່ງ
ແຍງຮັກສາສວນເພື່ອແລກປ່ຽນກັບຫມາກຂອງມັນ. ຄົນຮັກຂອງນາງກ່າວກັບນາງ
[13]ທ່ານຜູ້ທີ່ອາໄສຢູ່ໃນສວນຕ່າງໆ, ຫມູ່ໆຂອງຂ້າພະເຈົ້າກໍາລັງຟັງສຽງຂອງທ່ານ; ຂໍໃຫ້ຂ້າພະເຈົ້າເປັນຜູ້ທີ່ໄດ້ຍິນສຽງຂອງທ່ານດ້ວຍເຊັ່ນກັນ.
ຍິງສາວເວົ້າກັບຄົນຮັກຂອງນາງ
[14]ຈົ່ງຟ້າວເຖີດ, ຄົນຮັກຂອງຂ້າພະເຈົ້າ, ແລະ ຂໍເປັນຄືກັບເຍືອງໂຕຫນຶ່ງ ຫລື ກວາງຫນຸ່ມໂຕຫນຶ່ງທີ່ຢູ່ເທິງພູເຂົາແຫ່ງເຄື່ອງຫອມ.

# ເອຊາຢາ

1 [1]ນິມິດຂອງເອຊາຢາຜູ້ເປັນບຸດຊາຍຂອງອາໂມດ, ທີ່ລາວໄດ້ເຫັນກ່ຽວກັບຢູດາ ແລະ ນະຄອນ ເຢຣູຊາເລັມ, ໃນການປົກຄອງຂອງອຸດຊີຢາ,
ໂຢທາມ, ອາຮາດ, ແລະ ເຮເຊກີຢາ, ບັນດາກະສັດຂອງຢູດາ.

[2]ຟ້າສະຫວັນເອີຍ, ຈົ່ງຟັງ, ແຜ່ນດິນໂລກເອີຍ; ຈົ່ງງ່ຽງຫູຟັງເພາະພຣະຢາເວໄດ້ກ່າວວ່າ: "ເຮົາໄດ້ຖະຫນຸຖະຫນອມ ແລະ ລ້ຽງດູລູກໆ,
ແຕ່ພວກເຂົາໄດ້ກະບົດຕໍ່ເຮົາ.[3]ງົວຍັງຮູ້ຈັກເຈົ້າຂອງມັນ, ແລະ ລາຍັງຮູ້ຮາງຫຍ້າຂອງນາຍຂອງມັນ, ແຕ່ອິດສະຣາເອນບໍ່ຮູ້ຈັກ,
ອິດສະຣາເອນບໍ່ເຂົ້າໃຈ."
[4]ວິບັດ! ແກ່ປະເທດ, ພວກຄົນບາບ, ຊົນຊາດທີ່ແບກພາລະຫນັກດ້ວຍຄວາມຊົ່ວຊ້າ, ລູກຫລານຂອງຄົນຊົ່ວຮ້າຍ, ພວກບຸດຊາຍຂອງຜູ້ທີ່ເຮັດ
ຄວາມເຊື່ອມເສຍ! ພວກເຂົາໄດ້ປະຖິ້ມພຣະຢາເວ, ພວກເຂົາໄດ້ດູຫມິ່ນອົງບໍລິສຸດຂອງອິດສະຣາເອນ, ພວກເຂົາໄດ້ເຮັດ
ໂຕອອກຫ່າງຈາກພຣະອົງ.
[5]ເປັນຫຍັງພວກທ່ານຍັງຖືກຂ້ຽນຕີຢູ່ອີກ? ເປັນຫຍັງພວກທ່ານຈຶ່ງຖືກກະບົດຂຶ້ນເລື້ອຍໆ? ທັງຫົວກໍເຈັບໄປຫມົດ, ທັງຈິດໃຈກໍອ່ອນແອ.
[6]ຕັ້ງແຕ່ຝາຕີນຈົນຮອດຫົວບໍ່ມີພາກສ່ວນໃດທີ່ບໍ່ໄດ້ຮັບບາດເຈັບເລີຍ; ມີແຕ່ບາດແຜ, ແລະຮອຍຟົກຊໍ້າ, ແລະບາດແຜທີ່ຍັງບໍ່ເຊົາດີເທື່ອ;
ບາດແຜເຫລົ່ານັ້ນບໍ່ໄດ້ຖືກປິດໄວ້, ບໍ່ໄດ້ເຮັດຄວາມສະອາດ, ບໍ່ໄດ້ຫໍ່ຜ້າ ຫລື ໄດ້ຮັບການຮັກສາດ້ວຍນ້ຳມັນ.
[7]ປະເທດຂອງພວກເຈົ້າກໍຖືກທໍາລາຍ; ບັນດາເມືອງຂອງພວກເຈົ້າກໍຖືກເຜົາໄຫມ້; ສ່ວນທົ່ງນາຂອງ—ພວກເຈົ້າ,
ພວກຊາວຕ່າງດ້າວກໍຈະທໍາລາຍ—ໄປຕໍ່ຫນ້າພວກເຈົ້າຖືກປະຖິ້ມໃຫ້ເປົ່າຮ້າງ, ແລະຖືກທໍາລາຍໂດຍພວກຊາວຕ່າງດ້າວ.
[8]ບຸດສາວຂອງຊີໂອນໄດ້ຖືກຖິ້ມໄວ້ຄືກັບຕູບໃນສວນອະງຸ່ນ, ຄືກັບຖຽງໄຮ່ໃນສວນຫມາກແຕງ, ຄືກັບເມືອງທີ່ຖືກປິດລ້ອມໄວ້.
[9]ຖ້າຫາກພຣະຢາເວຈອມໂຢທາບໍ່ໄດ້ຊົງປະປ່ອຍຄົນສ່ວນເລັກນ້ອຍໄວ້ໃຫ້ກັບພວກເຮົາ, ພວກເຮົາກໍຈະເປັນຄືກັບເມືອງໂຊໂດມ,
ພວກເຮົາຈະເປັນຄືກັບເມືອງໂກໂມຣາ.
[10]ພວກຜູ້ປົກຄອງເມືອງໂຊໂດມ; ຈົ່ງຟັງຄໍາເວົ້າຂອງພຣະຢາເວ, ພວກຊາວເມືອງໂກໂມຣາ: ຈົ່ງຟັງກົດບັນຍັດຂອງພຣະເຈົ້າຂອງພວກເຮົາ,
[11]ພຣະຢາເວກ່າວວ່າ. "ເຄື່ອງບູຊາຫລວງຫລາຍຂອງພວກເຈົ້າທີ່ຖວາຍແກ່ເຮົາມີຫຍັງແດ່?" "ເຮົາໄດ້ມີແກະໂຕຜູ້, ແລະ ໄຂມັນຂອງສັດຕຸ້ຍພີ
ເປັນເຄື່ອງເຜົາຖວາຍບູຊາພຽງພໍແລ້ວ; ແລະເຮົາບໍ່ພໍໃຈໃນເລືອດຂອງບັນດາງົວຫນຸ່ມ, ແກະໂຕຜູ້, ຫລືແບ້.

 generated on Tue Jun 17 19:01:42 2025

12ເມື່ອພວກເຈົ້າມາເຂົ້າເຝົ້າຢູ່ຕໍ່ຫນ້າເຮົາ, ໃຜໄດ້ຮຽກຮ້ອງສິ່ງນີ້ຈາກເຈົ້າ, ໃຫ້ຢຽບຢ່ຳເຂົ້າມາໃນພື້ນທີ່ຂອງເຮົາ?13ຢ່ານຳເອົາເຄື່ອງບູ
ຊາທີ່ບໍ່ມີຄ່າຫຍັງມາອີກ; ເຄື່ອງຫອມກໍເປັນສິ່ງທີ່ຫນ້າກຽດຊັງສຳລັບເຮົາ; ເຮົາບໍ່ອາດທົນທານຕໍ່ການຊຸມນຸມທີ່ຊົ່ວຮ້າຍເຫລົ່ານີ້ໄດ້ຄື
ການຊຸມນຸມຂອງມື້ເທດສະການການສະຫລອງວັນເດືອນອອກໃຫມ່ ແລະ ວັນຊະບາໂຕ.
14ເຮົາກຽດຊັງເທດສະການສະລັງວັນອອກໃຫມ່ ແລະ ເທດສະການລັງສະຫລອງຕາມກຳນົດຂອງພວກເຈົ້າ;
ການຊຸມນຸມເຫລົ່ານັ້ນເປັນພາລະແກ່ເຮົາ; ເຮົາອິດເຫນື່ອຍເຫລືອທີ່ຈະອົດທົນກັບເທດສະການເຫລົ່ານັ້ນແລ້ວ.15ດ້ວຍເຫດນີ້ເມື່ອ
ໃດທີ່ພວກເຈົ້າແບມືຂອງພວກເຈົ້າອອກໃນການອະທິຖານ, ເຮົາຈະປິດຕາຂອງເຮົາຈາກພວກເຈົ້າ; ເຖິງແມ່ນວ່າພວກເຈົ້າຈະຖວາຍ
ຄຳອະທິຖານຫລວງຫລາຍ, ເຮົາກໍຈະບໍ່ຟັງ; ມືຂອງພວກເຈົ້າເຕັມໄປດ້ວຍເລືອດ.
16ຈົ່ງຊະລ້າງ, ຈົ່ງລ້າງຮ່າງກາຍຂອງເຈົ້າໃຫ້ສະອາດ; ຈົ່ງເອົາການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າອອກໄປໃຫ້ພົ້ນຈາກສາຍຕາຂອງເຮົາ;
ຈົ່ງຢ່າເຮັດຄວາມຊົ່ວ;17ຈົ່ງຮຽນຮູ້ທີ່ຈະເຮັດສິ່ງທີ່ດີ; ຈົ່ງຊອກຫາຄວາມຍຸດຕິທຳ, ຈົ່ງຊ່ວຍເຫລືອຜູ້ທີ່ຖືກກົດຂີ່, ຈົ່ງໃຫ້ຄວາມຍຸດຕິທຳຕໍ່ລູກທີ່ກຳ
ພ້າພໍ່, ແລະ ປົກປ້ອງແມ່ຫມ້າຍ.”
18ພຣະຢາເວກ່າວວ່າ; “ມາເຖີດ, ແລະໃຫ້ພວກເຮົາມາເວົ້າຄວາມກັນ,“ “ເຖິງແມ່ນວ່າບາບຂອງເຈົ້າຈະເປັນຄືກັບສີແດງເຂັ້ມ,
ມັນກໍຈະຂາວຄືກັບຫິມະ; ເຖິງແມ່ນວ່າຈະເປັນສີແດງຄືກັບຜ້າແດງເຂັ້ມ, ກໍຈະຂາວເທົ່າກັບຂົນແກະ.
19ຖ້າພວກເຈົ້າເຕັມໃຈ ແລະ ເຊື່ອຟັງ, ພວກເຈົ້າກໍຈະໄດ້ກິນອາຫານທີ່ດີແຫ່ງແຜ່ນດິນ,20ແຕ່ຖ້າພວກເຈົ້າປະຕິເສດ ແລະ ກະບົດ, ດາບກໍຈະລ້າງ
ຜານພວກເຈົ້າ,” ເພາະວ່າພຣະໂອດຂອງພຣະຢາເວໄດ້ກ່າວໄວ້ແລ້ວ.
21ເມືອງທີ່ສັດຊື່ໄດ້ກາຍເປັນເມືອງໂສເພນີໄດ້ແນວໃດຫລື! ເມືອງທີ່ເຄີຍເຕັມແຕ່ຄວາມຍຸຕິທຳ—ເມືອງທີ່ເຕັມດ້ວຍຄວາມຊອບທຳ,
ແຕ່ຕອນນີ້ເມືອງນັ້ນເຕັມໄປດ້ວຍພວກຄາດຕະກອນ.22ເງິນຂອງພວກເຈົ້າບໍ່ບໍຣິສຸດ, ເຫລົ້າອະງຸ່ນຂອງພວກເຈົ້າກໍປະສົມດ້ວຍນ້ຳ.
23ພວກເຈົ້ານາຍຂອງພວກເຈົ້າກໍເປັນພວກກະບົດ ແລະ ເປັນສ່ວນຫນຶ່ງຂອງພວກໂຈນ; ທຸກໆຄົນມັກຮັບສິນບົນ ແລະ ແລ່ນນຳຜົນຕອບແທນ.
ພວກເຂົາບໍ່ປົກປ້ອງລູກທີ່ກຳພ້າພໍ່, ຫລືຄະດີຂອງແມ່ຫມ້າຍກໍບໍ່ໄດ້ມາຢູ່ຕໍ່ຫນ້າພວກເຂົາ.
24ເພາະສະນັ້ນ ນີ້ແມ່ນການປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຢທາ, ອົງຜູ້ຊົງຣິດແຫ່ງອິດສະຣາເອນ: “ວິບັດຈົ່ງມີແກ່ພວກເຂົາ!
ເຮົາຈະແກ້ແຄ້ນຕໍ່ສັດຕູຂອງເຮົາ, ແລະ ລ້າງແຄ້ນຕໍ່ສັດຕູຂອງເຮົາດ້ວຍຕົວເຮົາເອງ;25ຮົາຈະຢື່ນມືຂອງເຮົາມາຕໍ່ສູ້ພວກເຈົ້າ, ເພື່ອຊະລ້າງສິ່ງສົກ
ກະປົກຂອງເຈົ້າອອກໄປຄືກັບຊະລ້າງດ້ວຍນ້ຳດ່າງ, ແລະເອົາສິ່ງສົກກະປົກທັງຫມົດຂອງເຈົ້າອອກໄປ.
26ເຮົາຈະເຮັດໃຫ້ພວກຜູ້ພິພາກສາຂອງພວກເຈົ້າເປັນຄືກັນກັບແຕ່ກ່ອນ, ແລະ ພວກທີ່ປຶກສາຂອງພວກເຈົ້າເປັນຄືກັບຕອນເລີ່ມຕົ້ນ; ຫລັງຈາກທີ່
ພວກເຈົ້າຈະໄດ້ຖືກເອີ້ນວ່າເມືອງແຫ່ງຄວາມຊອບທຳ, ເມືອງສັດຊື່."
27ຊີໂອນຈະໄດ້ຮັບການຖືກໄຖ່ດ້ວຍຄວາມຍຸດຕິທຳ, ແລະ ຜູ້ທີ່ກັບໃຈໃນເມືອງນັ້ນດ້ວຍຄວາມຊອບທຳ.28ພວກກະບົດ ແລະ
ພວກຄົນບາບຈະຖືກທຳລາຍໄປພ້ອມກັນ, ແລະ ຄົນເຫລົ່ານັ້ນທີ່ປະຖິ້ມພຣະຢາເວກໍຈະຖືກທຳລາຍໄປເຊັ່ນກັນ.
29“ເພາະວ່າພວກເຈົ້າຈະໄດ້ຮັບຄວາມອັບອາຍໃນຕົ້ນໂອກສັກສິດທີ່ພວກເຈົ້າປາຖະຫນາ, ແລະ
ພວກເຈົ້າຈະມີຄວາມອັບອາຍໃນສວນທີ່ພວກເຈົ້າໄດ້ເລືອກ.30ເພາະວ່າພວກເຈົ້າຈະເປັນຄືກັບຕົ້ນໄມ້ໂອກທີ່ໃບຫ່ຽວແຫ້ງໄປ, ແລະ
ຄືກັບສວນທີ່ບໍ່ມີນ້ຳ.
31ຄົນທີ່ແຂງແຮງກໍຈະຄືກັບເຊື້ອໄຟ, ແລະ ວຽກງານຂອງລາວກໍຈະຄືກັບປະກາຍໄຟ; ທັງສອງຢ່າງກໍຈະເຜົາໄຫມ້ໄປພ້ອມກັນ, ແລະ
ບໍ່ມີໃຜສາມາດດັບມັນໄດ້."

2 [1]ສິ່ງຕ່າງໆກ່ຽວກັບຢູດາ ແລະ ນະຄອນເຢຣູຊາເລັມ. ທີ່ເອຊາຢາບຸດຊາຍຂອງອາໂມດໄດ້ເຫັນໃນນິມິດ,[2]ໃນວາລະສຸດທ້າຍຈະເປັນດັ່ງນີ້
ພູເຂົາແຫ່ງພຣະວິຫານຂອງພຣະຢາເວຈະຖືກສ້າງຕັ້ງຂຶ້ນເປັນພູເຂົາທີ່ສູງທີ່ສຸດຂອງບັນດາພູເຂົາທັງຫລາຍ,
ແລະພູເຂົານີ້ຈະຖືກຍົກຂຶ້ນໄປເທິງເນີນພູເຂົາທັງຫລາຍ, ແລະ ບັນດາປະຊາຊາດຈະຫລັ່ງໄຫລມາສູ່ພູເຂົານີ້.

[3]ຊົນຊາດຫລວງຫລາຍຈະມາ ແລະ ກ່າວວ່າ, “ມາເຖີດ, ໃຫ້ພວກເຮົາຂຶ້ນໄປເທິງພູຂອງພຣະຢາເວ, ໄປທີ່ພຣະວິ
ຫານຂອງພຣະເຈົ້າຂອງຢາໂຄບ, ເພື່ອພຣະອົງຈະຊົງສອນທຸກວິທີທາງຂອງພຣະອົງແກ່ພວກເຮົາ, ແລະ ພວກເຮົາຈະເດີນໃນທາງພຣະເມດ
ຕາຂອງພຣະອົງ.” ເພາະວ່າທຳມະບັນຍັດຈະອອກມາຈາກຊີໂອນ, ແລະ ພຣະຄຳຂອງພຣະຢາເວຈະອອກມາຈາກນະຄອນ ເຢຣູຊາເລັມ.
[4]ພຣະອົງຈະຊົງຕັດສິນລະຫວ່າງປະຊາຊາດ ແລະ ຈະຊົງຕັດສິນຄວາມໃຫ້ແກ່ຊົນຊາດຫລວງຫລາຍ; ພວກເຂົາຈະເອົາດາບຂອງພວກເຂົາໃຫ້
ເປັນຫມາກສົບໄຖນາ, ແລະ ຕີຫອກຂອງພວກເຂົາໃຫ້ເປັນຂໍກ່ຽວ; ປະຊາຊາດຈະບໍ່ຍົກດາບຂຶ້ນຕໍ່ສູ້ກັບປະຊາຊາດ, ແລະ
ພວກເຂົາກໍຈະບໍ່ຝຶກຊ້ອມໃນການເຮັດສົງຄາມອີກຕໍ່ໄປ.
[5]ເຊື້ອສາຍຂອງຢາໂຄບເອີຍ, ມາເຖີດ, ແລະຂໍໃຫ້ພວກເຮົາເດີນໄປໃນຄວາມສະຫວ່າງຂອງພຣະຢາເວ.
[6]ເພາະວ່າພວກເຈົ້າໄດ້ປະຖິ້ມຊົນຊາດຂອງພວກເຈົ້າ, ເຊື້ອສາຍຂອງຢາໂຄບເອີຍ,
ເພາະວ່າພວກເຂົາຍັງເຕັມໄປດ້ວຍປະເພນີຈາກທິດຕາເວັນອອກ ແລະ ເຕັມໄປດ້ວຍພວກຜູ້ທຳນວຍຄືກັບພວກຟີລິດສະຕິນ, ແລະ
ພວກເຂົາບໍ່ໄດ້ຈັບມືທັກທາຍກັບພວກບຸດຊາຍຂອງພວກຄົນຕ່າງດ້າວ.
[7]ແຜ່ນດິນຂອງພວກເຂົາເຕັມໄປດ້ວຍເງິນ ແລະ ຄຳ, ແລະ ຄວາມຮັ່ງມີຂອງພວກເຂົາບໍ່ມີທີ່ສິ້ນສຸດ; ແຜ່ນດິນຂອງພວກເຂົາເຕັມໄປດ້ວຍຝູງມ້າ,
ແລະ ເຕັມໄປດ້ວຍລົດມ້າເສິກຂອງພວກເຂົາບໍ່ມີສິ້ນສຸດ.[8]ແຜ່ນດິນຂອງພວກເຂົາເຕັມໄປດ້ວຍຮູບເຄົາຣົບ;
ພວກເຂົາຂາບໄຫວ້ງານຫັດຖະກຳທີ່ເຮັດດ້ວຍມືຂອງພວກເຂົາເອງ, ສິ່ງຕ່າງໆທີ່ນິ້ວຂອງພວກເຂົາເອງໄດ້ເຮັດຂຶ້ນມາ.
[9]ປະຊາຊົນຈະກົ້ມຂາບລົງ, ແລະ ແຕ່ລະຄົນຈະລົ້ມລົງ; ເພາະສະນັ້ນຢ່າໃຫ້ພວກເຂົາລຸກຂຶ້ນມາ.[10]ຈົ່ງໄປທີ່ບ່ອນເຕັມດ້ວຍຜາຫີນ ແລະ ລີ້
ຕົວຢູ່ໃນພື້ນດິນໃຫ້ພົ້ນຈາກຄວາມຢ້ານກົວຂອງພຣະຢາເວ ແລະ ຈາກຣັດສະຫມີແຫ່ງສະຫງ່າຣາສີຂອງພຣະອົງ.[11]ຕາທີ່ຍິ່ງຈອງ
ຫອງຂຶ້ນຈະຖືກເຮັດໃຫ້ຕົກຕໍ່າລົງ, ແລະ ພວກຄົນທີ່ໂອ້ອວດຈະຖືກເຮັດໃຫ້ຕົກຕໍ່າລົງ, ແລະ ພຣະຢາເວພຣະອົງດຽວທີ່ສົມຄວນແກ່
ການສັນລະເສີນໃນມື້ນັ້ນ.
[12]ເພາະຈະມີມື້ແຫ່ງພຣະຢາເວຈອມໂຢທາທີ່ຈະຕໍ່ສູ້ກັບທຸກຄົນທີ່ອວດຕົວ ແລະ ຈອງຫອງຂຶ້ນ, ແລະ ຕໍ່ສູ້ກັບທຸກຄົນທີ່ໂອຫັງ - ແລະ
ພຣະອົງຈະຊົງເຮັດໃຫ້ຕົກຕໍ່າລົງ-[13]ແລະ ຕໍ່ສູ້ກັບຕົ້ນສົນສີດາແຫ່ງເລບານອນທຸກຕົ້ນທີ່ສູງ ແລະ ຍົກຕົວຂຶ້ນ, ແລະ
ໄດ້ຕໍ່ສູ້ກັບຕົ້ນໂອກທຸກໆຕົ້ນຂອງບາຊານ.
[14]ໃນວັນຂອງພຣະຢາເວຈອມໂຢທາຈະຕໍ່ສູ້ກັບພູເຂົາສູງທັງຫມົດ, ແລະ ໄດ້ຕໍ່ສູ້ກັບເນີນພູທັງຫມົດທີ່ຍົກຕົວເອງຂຶ້ນ,[15]ແລະ
ຕໍ່ສູ້ກັບຕຶກສູງທຸກແຫ່ງ, ແລະ ຕໍ່ສູ້ກັບກຳແພງທີ່ແຂງແຮງທັງຫມົດ,[16]ແລະ ຕໍ່ສູ້ກັບກຳປັ່ນທັງຫມົດຂອງທາຊິດ, ແລະ
ຕໍ່ສູ້ກັບເຮືອທີ່ສວຍງາມທີ່ລອຍລຳຢູ່.
[17]ຄວາມຈອງຫອງຂອງມະນຸດຈະຖືກຖອຍລົງໃຫ້ຕົກຕໍ່າລົງ, ແລະ ຄວາມໂອຫັງຂອງມະນຸດຈະລົ້ມລົງ;
ພຣະຢາເວພຣະອົງດຽວທີ່ສົມຄວນໄດ້ຮັບການສັນລະເສີນໃນມື້ນັ້ນ.[18]ຮູບເຄົາລົບທັງຫລາຍຈະສູນສິ້ນໄປ.[19]ມະນຸດຈະໄປຍັງຖ້ຳພູຜາຕ່າງໆ.
ແລະຮູຂອງພື້ນດິນ, ໃຫ້ພົ້ນຈາກຄວາມຫນ້າຢ້ານກົວຂອງພຣະຢາເວ, ແລະ ຈາກພຣະສີຣິແຫ່ງສະຫງ່າລາສີຂອງພຣະອົງ,
ເມື່ອພຣະອົງຊົງລຸກຂຶ້ນເພື່ອເຮັດໃຫ້ແຜ່ນດິນໂລກຢ້ານກົວ
[20]ໃນວັນນັ້ນ, ຜູ້ຄົນຈະຖິ້ມຮູບເຄົາລົບທີ່ເຮັດດ້ວຍເງິນ ແລະ ຄຳທີ່ພວກເຂົາໄດ້ສ້າງຂຶ້ນເອງມາເພື່ອນະມັດສະການຖິ້ມໄປ–
ພວກເຂົາຈະໂຍນສິ່ງເຫລົ່ານັ້ນລົງໄປຫາໂມ້ ແລະ ເຈຍ.[21]ພວກເຂົາຈະໄປລີ້ຢູ່ໃນຮອຍແຕກໃນຫີນຜາ.
ແລະຜາເປື່ອນໃຫ້ພົ້ນຈາກຄວາມຢ້ານກົວຂອງພຣະຢາເວ ແລະ ຈາກສະຫງ່າລາສີຂອງລັດສະຫມີພາບຂອງພຣະອົງ,
ພຣະອົງໄດ້ລຸກຂຶ້ນເພື່ອເຮັດໃຫ້ແຜ່ນດິນໂລກຢ້ານກົວ.[22]ຈົ່ງເລີກໄວ້ວາງໃຈໃນມະນຸດ, ຜູ້ທີ່ລົມຫາຍໃຈທີ່ມີຊີວິດຢູ່ໃນດັງຂອງລາວ,
ເພາະລາວມີຄຸນຄ່າຫຍັງແດ່?

 generated on Tue Jun 17 19:01:42 2025

3 1ຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າພຣະຢາເວຈອມໂຢທາ, ຈະຊົງເອົາຄວາມຊ່ວຍເຫລືອ ແລະ ການຈຸນເຈືອອອກໄປຈາກກຸງເຢຣູຊາເລັມ ແລະ
ຢູດາ. ຄືສະບຽງອາຫານ ແລະ ນໍ້າດື່ມທັງຫມົດ;2ນັກຮົບທີ່ກ້າຫານ, ຜູ້ພິພາກສາ, ສາດສະດາ, ຜູ້ທໍານວາຍ, ຜູ້ເຜີຍພຣະວັດຈະນະ, ແລະ
ຜູ້ໃຫຍ່;3ນາຍກອງຫ້າສິບຄົນ, ຄົນທີ່ປະຊາຊົນເຄົາລົບນັບຖື, ທີ່ປຶກສາ, ຊ່າງຫັດຖະກໍາທີ່ມີສີມື, ແລະ ຄົນໃຊ້ເວດມົນທີ່ຊໍານານ.

4"ເຮົາຈະແຕ່ງຕັ້ງຄົນຫນຸ່ມໃຫ້ເປັນຜູ້ນໍາຂອງພວກເຂົາ, ແລະ ຄົນຫນຸ່ມຈະປົກຄອງເຫນືອພວກເຂົາ.5ປະຊາຊົນຈະຖືກກົດຂີ່ຂົ່ມເຫັງ,
ທຸກຄົນຈະຖືກບີບບັງຄັບຈາກຄົນອື່ນ; ແລະ ທຸກຄົນຈະຖືກເພື່ອນບ້ານໃກ້ຄຽງກົດຂີ່ຂູດຮີດ; ເດັກນ້ອຍຈະດູຫມິ່ນຜູ້ທີ່ອາວຸໂສກວ່າ, ແລະ
ຄົນຊົ່ວຮ້າຍຈະທ້າທາຍຜູ້ທີ່ມີກຽດ.
6ເຖິງແມ່ນວ່າຜູ້ຊາຍຈະຖືກອ້າຍຂອງລາວຢູ່ໃນເຮືອນຂອງພໍ່ ແລະ ເວົ້າວ່າ, 'ເຈົ້າມີເສື້ອຄຸມ; ຈົ່ງມາເປັນຜູ້ປົກຄອງຂອງພວກເຮົາເຖີດ, ແລະ
ໃຫ້ຊາກປະຫລັກຫັກພັງນີ້ຕົກຢູ່ໃນມືຂອງເຈົ້າ.'7ໃນມື້ນັ້ນເຂົາຈະຮ້ອງ ແລະ ກ່າວວ່າ, 'ຂ້ອຍຈະບໍ່ເປັນຜູ້ຮັກສາ; ຂ້ອຍບໍ່ມີອາຫານຫລືເສື້ອຜ້າ.
ພວກເຈົ້າຢ່າແຕ່ງຕັ້ງຂ້ອຍໃຫ້ເປັນຜູ້ປົກຄອງປະຊາຊົນເລີຍ.'"
8ເພາະວ່າເມືອງເຢຣູຊາເລັມໄດ້ສະດຸດ, ແລະຢູດາກໍລົ້ມລົງ, ເພາະຄໍາເວົ້າ ແລະ ການກະທໍາ ຂອງພວກເຂົາຕໍ່ສູ້ພຣະຢາເວ,
ທ້າທາຍຕໍ່ພຣະເນດແຫ່ງພຣະສະຫງ່າຣາສີຂອງພຣະອົງ.9ການສະແດງອອກເທິງໃບຫນ້າຂອງພວກເຂົາກໍເປັນພະຍານປັກປໍາຕໍ່ພວກເຂົາ; ແລະ
ພວກເຂົາໄດ້ເວົ້າເຖິງຄວາມບາບຂອງພວກເຂົາເຫມືອນກັບເມືອງໂຊໂດມ; ພວກເຂົາບໍ່ໄດ້ປິດບັງຫຍັງເລີຍ. ວິບັດຈົ່ງມີແກ່ພວກເຂົາ!
ເພາະວ່າພວກເຂົາໄດ້ເຮັດໃຫ້ໄພວິບັດມາສູ່ຕົນເອງຢ່າງເຕັມທີ.
10ຈົ່ງບອກຄົນຊອບທໍາວ່າພວກເຂົາຈະໄປໄດ້ດີ, ເພາະວ່າພວກເຂົາຈະກິນຜົນຂອງການກະທໍາຂອງພວກເຂົາ.11ວິບັດຈົ່ງມີແກ່ຄົນອະທໍາ!
ສິ່ງທີ່ບໍ່ດີຈະເກີດຂຶ້ນກັບເຂົາ, ເພາະການຕອບແທນທີ່ມືຂອງເຂົາໄດ້ກະທໍາ.12ຊົນຊາດຂອງເຮົາເອີຍ, ເດັກນ້ອຍກໍເປັນຜູ້ບີບບັງຄັບພວກເຂົາ, ແລະ
ພວກຜູ້ຍິງກໍປົກຄອງເຫນືອພວກເຂົາ. ປະຊາຊົນຂອງເຮົາ, ຄົນເຫລົ່ານັ້ນທີ່ນໍາທາງພວກເຈົ້າໄດ້ນໍາພວກເຈົ້າໃຫ້ຫລົງທາງໄປ ແລະ
ເຮັດໃຫ້ການນໍາທາງຂອງພວກເຈົ້າສັບສົນ.
13ພຣະຢາເວຊົງຢືນຂຶ້ນເພື່ອເປັນຜູ້ກ່າວໂທດ; ພຣະອົງກໍາລັງຢືນເພື່ອຊົງກ່າວໂທດຄົນເຫລົ່ານັ້ນ.14ແລະ ພວກຜູ້ນໍາຂອງພວກເຂົາ: “ເຈົ້າໄດ້ ທໍາ
ລາຍສວນອະງຸ່ນແລ້ວ. ຂອງທີ່ຮິບມາຈາກຄົນຍາກຈົນແມ່ນຢູ່ໃນເຮືອນຂອງພວກເຈົ້າ.15ເປັນຫຍັງພວກເຈົ້າຈຶ່ງບີບບັງຄັບປະຊາຊົນຂອງເຮົາ
ແລະກະທໍາການທໍລະມານຕໍ່ຄົນທຸກຍາກ?” ນີ້ແມ່ນ ຄໍາ ປະກາດຂອງອົງພຣະຜູ້ເປັນເຈົ້າ ພຣະຢາເວຈອມໂຢທາ.
16ພຣະຢາເວກ່າວວ່າ ເພາະວ່າພວກລູກສາວຂອງຊີໂອນນັ້ນຈອງຫອງ, ຍ່າງຊູຄໍໄປຕາມເສັ້ນທາງ, ແລະ ສົ່ງສາຍຕາເຈົ້າຊູ້,
ຂະນະທີ່ພວກເຂົາຍ່າງໄປຢ່າງຫມັ້ນໃຈ ແລະ ສົ້ນຕີນຂອງພວກເຂົາໃຫ້ມີສຽງດັງ,
17ເພາະສະນັ້ນອົງພຣະຜູ້ເປັນເຈົ້າຈະເຮັດໃຫ້ເກີດພະຍາດຂີ້ຫິດ ເທິງຫົວຂອງພວກລູກສາວຂອງຊີໂອນ, ແລະ
ພຣະຢາເວຈະເຮັດໃຫ້ພວກເຂົາເຈົ້າເປັນຄົນຫົວລ້ານ.
18ໃນວັນນັ້ນອົງພຣະຜູ້ເປັນເຈົ້າຈະເອົາເຄື່ອງປະດັບອັນງົດງາມທີ່ຂໍ້ຕີນຂອງພວກເຂົາໄປ, ອີກທັງແຂບຮັດຫົວ, ແລະ
ເຄື່ອງປະດັບທີ່ມີຮູບພະຈັນສ້ຽວ,19ຕຸ້ມຫູ, ສາຍແຂນ, ແລະຜ້າປົກຫນ້າ;20ຜ້າຄາດຫົວ, ສ້ອຍຂໍ້ຕີນ, ຜ້າຄາດແອວ, ແລະ ອົບນໍ້າຫອມ, ແລະ
ຕະກຸດ.
21ພຣະອົງຈະເອົາແຫວນແລະພອຍທີ່ເກາະທີ່ດັງໄປ;22ເຄື່ອງນຸ່ງສໍາລັບໃສ່ອອກງານ, ເສື້ອຄຸມ, ຜ້າປົກຫນ້າ, ແລະ ກະເປົາຖື;23ກະຈົກຖືສ່ອງ,
ຜ້າປ່ານ, ຜ້າປົກຫົວ, ແລະ ເສື້ອຊັ້ນນອກ.
24ມັນຈະມີພຽງແຕ່ກິ່ນເຫມົ່າເຫມັນແທນນໍ້າຫອມ; ແລະ ຈະມີແຕ່ເຊືອກຮັດແທນຜ້າຄາດແອວ;
ຫລືຈະມີແຕ່ຫົວລ້ານແທນຜົມທີ່ຈະຈັດຊົງຢ່າງດີ, ແລະ ຈະມີແຕ່ການນຸ່ງຫົ່ມດ້ວຍຜ້າກະສອບແທນເສື້ອຄຸມ; ແລະ
ຈະມີແຕ່ຄວາມອັບອາຍແທນຄວາມສວຍງາມ.25ພວກຜູ້ຊາຍຂອງເຈົ້າຈະລົ້ມລົງດ້ວຍດາບ, ແລະ
ພວກຜູ້ຊາຍທີ່ແຂງແຮງຂອງພວກເຈົ້າຈະລົ້ມລົງໃນສົງຄາມ.26ປະຕູນະຄອນເຢຣູຊາເລັມຈະເປັນທຸກ ແລະ ໂສກເສົ້າ; ແລະ
ນາງຈະອ້າງວ້າງແລະ ນັ່ງລົງເທິງພື້ນດິນ.

 generated on Tue Jun 17 19:01:42 2025

4 [1]ໃນມື້ນັ້ນຜູ້ຊາຍເຈັດຄົນຈະຢຶດຜູ້ຊາຍຄົນຫນຶ່ງໄວ້ແລະກ່າວວ່າ," ເຮົາຈະກິນອາຫານຂອງເຮົາເອງ, ເຮົາຈະສວມໃສ່ເສື້ອຜ້າຂອງເຮົາເອງ.
ແຕ່ຂໍພຽງໃຫ້ເຮົາໃສ່ຊື່ຂອງທ່ານ ເພື່ອເອົາຄວາມອັບອາຍຂອງເຮົາອອກໄປ."[2]ໃນວັນນັ້ນກິ່ງຂອງພຣະຢາເວຈະງົດງາມ ແລະ ມີສະຫງ່າລາສີ,
ແລະ ຜົນລະໄມ້ຂອງແຜ່ນດິນຈະມີລົດແຊບ ແລະໃຫ້ຄວາມປິຕິຍິນດີ ສໍາລັບຜູ້ທີ່ລອດຊີວິດເຫລົ່ານັ້ນໃນອິດສະຣາເອນ.

[3]ຈະເກີດມີຜູ້ທີ່ເຫລືອໃຫ້ຢູ່ໃນຊີໂອນ ແລະ ຜູ້ທີ່ຍັງຄົງເຫລືອຢູ່ໃນກຸງເຢຣູຊາເລັມຈະໄດ້ຮັບການຊົງເອີ້ນໃຫ້ບໍລິສຸດ,
ທຸກຄົນທີ່ຖືກບັນທຶກໄວ້ວ່າມີຊີວິດຢູ່ໃນກຸງເຢຣູຊາເລັມ.[4]ເຫດການນີ້ຈະເກີດຂຶ້ນເມື່ອອົງພຣະຜູ້ເປັນເຈົ້າ
ຈະຊົງຊໍາລະລ້າງຄວາມເປິເປື້ອນຂອງລູກຍິງທັງຫລາຍຂອງຊີໂອນ, ແລະ ຈະຊໍາລະຄາບໂລຫິດຈາກທ່າມກາງກຸງເຢຣູຊາເລັມ,
ໂດຍວິນຍານແຫ່ງການພິພາກສາ ແລະ ວິນຍານແຫ່ງແປວໄຟ.
[5]ແລ້ວພຣະຢາເວຈະຊົງສ້າງເມກ ແລະ ຄວັນໃນຕອນກາງເວັນ, ແລະ ແສງສ່ອງສະຫວ່າງຂອງແປວໄຟໃນຕອນກາງຄືນ;
ເຫນືອທົ່ວທຸກແຫ່ງຂອງພູຊີໂອນ, ແລະ ເຫນືອສະຖານທີ່ຊຸມນຸມຂອງເມືອງນັ້ນ; ຊຶ່ງຈະເປັນສິ່ງທີ່ປົກຄຸມເຫນືອພຣະສະຫງ່າຣາສີທັງສິ້ນ.
[6]ສິ່ງນັ້ນຈະເປັນຮົ່ມເງົາເພື່ອບັງແດດຈາກຄວາມຮ້ອນໃນຕອນກາງເວັນ, ແລະ ເປັນທີ່ລີ້ໄພທີ່ກໍາບັງຈາກພະຍຸ ແລະ ຝົນ.

 generated on Tue Jun 17 19:01:42 2025

# 5

1 ຂໍໃຫ້ຂ້າພະເຈົ້າຮ້ອງເພງເພື່ອຜູ້ທີ່ເປັນທີ່ຮັກຂອງຂ້າພະເຈົ້າ, ເພງຂອງຜູ້ທີ່ເປັນທີ່ຮັກຂອງຂ້າພະເຈົ້າກ່ຽວກັບສວນອະງຸ່ນຂອງລາວ. ຜູ້ທີ່ເປັນ
ທີ່ຮັກຂອງຂ້າພະເຈົ້າໄດ້ມີສວນອະງຸ່ນສວຍນຫນຶ່ງຢູ່ເທິງພູເຂົາທີ່ມີຄວາມອຸດົມສົມບູນຫລາຍ. 2 ລາວໄດ້ຂຸດສວນນັ້ນ, ແລະ
ໄດ້ເອົາກ້ອນຫີນອອກໄປ, ແລະ ໄດ້ປູກສວນນັ້ນດ້ວຍແນວອະງຸ່ນພັນເຄືອທີ່ດີ. ລາວໄດ້ສ້າງຫໍຄອຍຫລັງຫນຶ່ງໄວ້ຢູ່ກາງສວນນັ້ນ, ແລະ
ຍັງໄດ້ສ້າງບ່ອນເຮັດເຫລົ້າອະງຸ່ນໄວ້ນຳ. ລາວໄດ້ລໍຖ້າໃຫ້ສວນນັ້ນອອກຫມາກອະງຸ່ນ, ແຕ່ວ່າມັນກໍອອກຫມາກມີແຕ່ຫມາກອະງຸ່ນສົ້ມເທົ່ານັ້ນ.

3 ເພາະສະນັ້ນ, ບັດນີ້ປະຊາວນະຄອນເຢຣູຊາເລັມ ແລະ ຊາວຢູດາ, ຕັດສິນລະຫວ່າງຂ້າພະເຈົ້າກັບສວນອະງຸ່ນຂອງຂ້າພະເຈົ້າ. 4 ມີຫຍັງທີ່
ຈະສາມາດເຮັດກັບສວນອະງຸ່ນຂອງຂ້າພະເຈົ້າໄດ້ອີກ, ທີ່ຂ້າພະເຈົ້າຍັງບໍ່ໄດ້ເຮັດໃຫ້ກັບສວນນັ້ນ? ເມື່ອຂ້າພະ
ເຈົ້າຄາດຫວັງວ່າສວນນັ້ນຈະຜະລິດຫມາກອະງຸ່ນ, ແຕ່ເປັນຫຍັງມັນຈຶ່ງອອກເປັນຫມາກອະງຸ່ນສົ້ມໄດ້?
5 ບັດນີ້ຂ້າພະເຈົ້າຈະບອກກັບພວກທ່ານວ່າຂ້າພະເຈົ້າຈະເຮັດແນວໃດກັບສວນຂອງຂ້າພະເຈົ້າ: ຂ້າພະເຈົ້າຈະຍ້າຍຮົ້ວກັ້ນອອກໄປ, ຂ້າພະເຈົ້າ
ຈະປ່ຽນສວນນັ້ນໃຫ້ກາຍເປັນທົ່ງຫຍ້າ, ຂ້າພະເຈົ້າຈະທຳລາຍກຳແພງລົງ, ແລະ ສວນນັ້ນຈະຖືກຢຽບຢ້ຳ. 6 ຂ້າພະ
ເຈົ້າຈະປ່ອຍໃຫ້ມັນຫວ່າງເປົ່າ, ແລະ ສວນນັ້ນຈະບໍ່ຖືກພວນດິນ ຫລື ຂຸດອີກ. ແຕ່ກົງກັນຂ້າມ, ຕົ້ນໄມ້ ແລະ ຫນາມຈະປົ່ງຂຶ້ນ. ຂ້າພະ
ເຈົ້າຍັງຈະສັ່ງໃຫ້ເມກບໍ່ໃຫ້ຝົນຕົກເທິງມັນ.
7 ສຳລັບສວນອະງຸ່ນຂອງພຣະຢາເວຈອມໂຢທາ ແມ່ນເຊື້ອສາຍແຫ່ງອິດສະຣາເອນ, ແລະ ຄົນຢູດາເປັນສິ່ງທີ່ປູກໄວ້ຂອງພຣະອົງທີ່ຊົງພໍພຣະໄທ,
ພຣະອົງໄດ້ຊົງລໍຖ້າຄວາມຍຸດຕິທຳ, ແຕ່ແທນທີ່ຈະເປັນຢ່າງນັ້ນ, ກົງກັນຂ້າມກັບມີແຕ່ການຂ້າ; ເມື່ອຊົງລໍຖ້າຄວາມຊອບທຳ, ກໍມີແຕ່, ສຽງ
ການຮ້ອງຂໍຄວາມຊ່ວຍເຫລືອ.
8 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນ ຜູ້ທີ່ລວມເຮືອນ ແລະ ເຮືອນເຂົ້ານຳກັນ, ຜູ້ທີ່ລວມທົ່ງນາ ແລະ ທົ່ງນາເຂົ້ານຳກັນ, ຈົນບໍ່ມີບ່ອນຫວ່າງເຫລືອຢູ່ເລີຍ,
ແລະມີພຽງແຕ່ພວກທ່ານເທົ່ານັ້ນທີ່ຍັງເຫລືອຢູ່ໃນແຜ່ນດິນນີ້! 9 ພຣະຢາເວຈອມໂຢທາໄດ້ຊົງກ່າວກັບຂ້າພະເຈົ້າວ່າ, ມີຫລາຍຫລັງຄາເຮືອນຈ
ະເປົ່າຮ້າງ, ເຖິງວ່າຈະເປັນບ້ານໃຫຍ່ໂຕ ແລະ ຫນ້າຊື່ນຊົມ, ກໍປາສະຈາກຜູ້ຢູ່ອາໄສ. 10 ເພາະສວນອະ
ງຸ່ນສິບແອກຈະໃຫ້ຜົນຜະລິດພຽງແຕ່ຫນຶ່ງອາບເທົ່ານັ້ນ, ແລະ ແນວພັນຫນຶ່ງໂຮເມີຈະໃຫ້ຜົນຜະລິດພຽງແຕ່ໜຶ່ງເອເຟ.
11 ວິບັດແກ່ຄົນເຫລົ່ານັ້ນທີ່ລຸກຂຶ້ນແຕ່ເຊົ້າມືດເພື່ອມາຫາເຫລົ້າດື່ມ, ຄົນເຫລົ່ານັ້ນທີ່ຍັງຄົງຄ້າງຢູ່ຈົນຮອດເດິກດຶນຈົນກ່ວາເຫລົ້າອະ
ງຸ່ນຈະເຮັດໃຫ້ພວກເຂົາພິນາດໄປ. 12 ພວກເຂົາໄດ້ຈັດງານລ້ຽງດ້ວຍສຽງພິນໃຫຍ່, ພິນສອງຄູ່, ລະນາດ, ຂຸຍ, ແລະ ເຫລົ້າອະງຸ່ນ,
ແຕ່ພວກເຂົາບໍ່ໄດ້ລະລຶກເຖິງວຽກງານຂອງພຣະຢາເວ, ແລະພວກເຂົາກໍບໍ່ໄດ້ພິຈາລະນາເຖິງສິ່ງທີ່ພຣະອົງຊົງໄດ້ເຮັດດ້ວຍພຣະຫັດຂອງພຣະ
ອົງ.
13 ເພາະສະນັ້ນ ຊົນຊາດຂອງຂ້າພະເຈົ້າຕໍ່ມາໄດ້ຕົກເປັນຊະເລີຍເພາະຂາດຄວາມເຂົ້າໃຈ; ພວກຜູ້ນຳທີ່ມີກຽດສັກສີຂອງພວກເຂົາກໍຫິວໂຫຍ,
ແລະ ພວກປະຊາຊົນຫິວໄປກໍບໍ່ມີຫຍັງຈະດື່ມ. 14 ເພາະສະນັ້ນ ແດນຄົນຕາຍກໍໄດ້ເປັນສາເຫດໃຫ້ຄວາມກະຫາຍຂອງມັນຫລາຍຂຶ້ນ ແລະ
ອ້າປາກຂອງມັນກວ້າງຂຶ້ນອີກ; ພວກຄົນສູງສັກ, ປະຊາຊົນ, ພວກຜູ້ນຳຂອງພວກເຂົາ, ແລະ ພວກສຳມາເລເທເມົາ ແລະ ຜູ້ຄົນເຫລົ່າ
ນັ້ນທີ່ມີຄວາມສຸກໃນບັນດາພວກເຂົາ, ກໍໄດ້ຕົກລົງໄປໃນທີ່ດິນແດນຂອງຄົນຕາຍ.
15 ມະນຸດຈະຖືກບີບບັງຄັບໃຫ້ກົ້ມຕົວລົງ, ແລະ ມະນຸດຈະຖືກເຮັດໃຫ້ຕົກຕ່ຳລົງ; ໃນຕາຂອງຄົນທີ່ຍິ່ງຈອງຫອງຈະຖືກທຳລາຍ. 16 ພຣະຢາ
ເວຈອມໂຢທາຈະຊົງເປັນທີ່ສັນລະເສີນໃນຄວາມຍຸດຕິທຳຂອງພຣະອົງ, ແລະ ພຣະເຈົ້າອົງບໍຣິສຸດຈະຊົງສຳແດງຄວາມບໍຣິສຸດຂອງພຣະ
ອົງເອງໂດຍຄວາມຊອບທຳຂອງພຣະອົງ. 17 ຈາກນັ້ນຝູງແກະຈະຫາກິນຄືກັນກັບເປັນທົ່ງຫຍ້າຂອງພວກມັນເອງ, ແລະ ໃນຊາກຫັກພັງ,
ພວກລູກແກະກໍຈະເລັມຫຍ້າຄືກັນກັບຄົນຕ່າງຊາດ. "ແລະ ຢູ່ໃນຊາກຫັກພັງຂອງຄົນຮັ່ງມີ, ລູກແກະຈະລ້ຽງສັດ.
18 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນທີ່ດຶງຄວາມຊົ່ວຮ້າຍໄປໃສ່ສາຍເຊືອກທີ່ບໍ່ມີປະໂຫຍດ ແລະ ພວກຄົນທີ່ດຶງລາກຄວາມບາບໄປຄືກັບວ່າມັນເປັນ
ເຊືອກໂຍງກວຽນ. 19 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນທີ່ເວົ້າວ່າ, "ຂໍໃຫ້ພຣະອົງຈົ່ງກະທຳຢ່າງຟ້າວຟັ່ງ, ຂໍໃຫ້ພຣະອົງກະທຳໂດຍໄວ, ເພື່ອພວກເຮົາຈ
ະສາມາດເຫັນໄດ້ວ່າມີຫຍັງເກີດຂຶ້ນ, ແລະ ໃຫ້ແຜນການຂອງອົງບໍຣິສຸດແຫ່ງອິດສະຣາເອນມາເຖິດ,
ເພື່ອພວກເຮົາຈະໄດ້ຮູ້ແຜນການເຫລົ່ານັ້ນ."
20 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນທີ່ເອີ້ນຄວາມຊົ່ວວ່າຄວາມດີ, ແລະ ເອີ້ນຄວາມດີວ່າຄວາມຊົ່ວ; ພວກທີ່ຖືວ່າຄວາມມືດເປັນຄວາມສະຫວ່າງ, ແລະ
ຄວາມສະຫວ່າງເປັນຄວາມມືດ; ພວກທີ່ຖືວ່າຄວາມຂົມຂື່ນຄືຄວາມຫວານ, ແລະ ຄວາມຫວານຄືຄວາມຂົມຂື່ນ! 21 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນ
ຜູ້ທີ່ມີຄວາມສະຫລາດໃນສາຍຕາຂອງຕົນເອງ, ແລະ ຜູ້ທີ່ມີສະຕິປັນຍາຮອບຄອບໃນຄວາມເຂົ້າໃຈຂອງຕົນເອງ!
22 ວິບັດຈົ່ງມີແກ່ຄົນເຫລົ່ານັ້ນ ທີ່ເກັ່ງໃນການດື່ມເຫລົ້າອະງຸ່ນ, ແລະ ພວກນາຍຈ້າງທີ່ເກັ່ງໃນການປະສົມເຫລົ້າ; 23 ຜູ້ທີ່ປ່ອຍຕົວຄົນອະ
ທຳສຳລັບຄ່າຕອບແທນ, ແລະ ການຖອນສິດຂອງຜູ້ບໍ່ມີຄວາມຜິດ!
24 ເພາະສະນັ້ນ ແປວໄຟເຜົາຜານຕໍເຂົ້າສັນໃດ, ແລະ ຫຍ້າແຫ້ງຍຸບລົງໄປໃນແປວໄຟສັນໃດ, ຮາກຂອງພວກເຂົາກໍຈະເນົ່າເປື່ອຍ, ແລະ ຄວາມ
ເບັ່ງບານຂອງພວກເຂົາກໍຈະປິວໄປຄືກັບຜົງຂີ້ຝຸ່ນສັນນັ້ນ. ສິ່ງນີ້ຈະເກີດຂຶ້ນເພາະວ່າພວກເຂົາໄດ້ປະຕິເສດພຣະບັນຍັດຂອງອົງພຣະຢາເວຈອມ
ໂຢທາ, ແລະເພາະວ່າພວກເຂົາໄດ້ດູຫມິ່ນພຣະຄຳຂອງອົງຜູ້ບໍຣິສຸດຂອງອິດສະຣາເອນ.
25 ເພາະສະນັ້ນ ຄວາມໂກດແຄ້ນຂອງພຣະຢາເວຈຶ່ງໄດ້ເພີ່ມຂຶ້ນຕໍ່ຊົນຊາດຂອງພຣະອົງ. ພຣະອົງໄດ້ຢຽດພຣະຫັດອອກຕໍ່ສູ້ພວກເຂົາ ແລະ
ລົງໂທດພວກເຂົາ. ພູເຂົາທັງຫລາຍກໍສັ່ນສະເທືອນ, ແລະ ຊາກສົບຂອງພວກເຂົາຄ້າຍຄືກອງຂີ້ເຫຍື້ອຕາມຖະຫນົນ.
ໃນເຫດການທັງຫມົດເຫລົ່ານີ້, ຄວາມໂກດແຄ້ນຂອງພຣະອົງບໍ່ໄດ້ບັນເທົາລົງ, ແຕ່ກົງກັນຂ້າມ, ພຣະຫັດຂອງພຣະອົງຍັງຢຽດອອກ.
26 ພຣະອົງຈະໃຫ້ສັນຍານແກ່ຊົນຊາດທັງຫລາຍທີ່ຢູ່ຫ່າງໄກອອກໄປ ແລະ ຊົງຜິວພຣະໂອດກັບຄົນເຫລົ່ານັ້ນທີ່ສຸດປາຍຂອງແຜ່ນດິນໂລກ,
ເບິ່ງເຖີດ, ພວກເຂົາຈະມາໃນທັນທີ ແລະ ມາຢ່າງວ່ອງໄວ.
27 ໃນບັນດາພວກເຂົາບໍ່ມີຄົນໃດທີ່ອ່ອນເພຍ ຫລື ສະດຸດລົ້ມ; ບໍ່ມີໃຜນອນບໍ່ຫລັບ ຫລື ນອນຫລັບ. ບໍ່ມີສາຍແອວຂອງພວກເຂົາທີ່ຫລຸດໄປ, ບໍ່
ມີສາຍເກີບຂອງພວກເຂົາທີ່ຂາດໄປ. 28 ລູກສອນ ແລະ ຄັນທະນູທັງຫມົດຂອງພວກເຂົາຖືກໂກ້ງຂຶ້ນແລ້ວ; ສຽງກີບມ້າທັງຫລາຍຄ້າຍຄືຫີນເຫລັກ
ໄຟ, ແລະ ລໍ້ລົດມ້າເສິກຂອງພວກເຂົາຄ້າຍຄືພະຍຸ.


generated on Tue Jun 17 19:01:42 2025

29 ສຽງຮ້ອງໂຫຍຫວນຂອງພວກເຂົາຈະເປັນຄືກັບສິງໂຕ; ພວກເຂົາຈະຮ້ອງຄຳລາມ ຄືກັບສິງໂຕຫນຸ່ມ. ພວກເຂົາຈະຮ້ອງຄຳລາມ ແລະ
ຄຸ້ມເອົາເຫຍື່ອ ແລະ ລາກມັນໄປບ່ອນທີ່ບໍ່ມີໃຜສາມາດຊ່ວຍໃຫ້ລອດໄດ້.
30 ໃນມື້ນັ້ນພວກເຂົາຈະຄຳລາມຕໍ່ເຫຍື່ອນັ້ນຄືກັບສຽງນອງຂອງທະເລ.
ຖ້າຫາກໃຜເບິ່ງຂ້າມດິນແດນນັ້ນ, ເຂົາຈະເຫັນຄວາມມືດ ແລະ ຄວາມທຸກໃຈ; ແມ່ນແຕ່ແສງສະຫວ່າງກໍຈະຖືກເມກເຮັດໃຫ້ມືດໄປ.

 generated on Tue Jun 17 19:01:42 2025

# 6

[1]ໃນປີທີ່ກະສັດອຸດຊີຢາໄດ້ສິ້ນຊີວິດ, ຂ້າພະເຈົ້າໄດ້ເຫັນອົງພຣະຜູ້ເປັນເຈົ້ານັ່ງຢູ່ເທິງບັນລັງ; ພຣະອົງຊົງສູງ ແລະ ສູງຍິ່ງກວ່າສິ່ງອື່ນໃດ, ແລະ
ເສື້ອຄຸມຂອງພຣະອົງເຕັມໃນພຣະວິຫານ.[2]ເຫນືອພຣະອົງຂຶ້ນໄປຄືພວກເຊລາພິມ; ແຕ່ລະຕົນມີປີກຫົກປີກ; ແຕ່ລະຕົນປົກຄຸມຫນ້າຂອງຕົນ
ເອງດ້ວຍປີກສອງປີກ, ແລະປົກຄຸມຕີນຂອງຕົນດ້ວຍປີກສອງປີກ, ແລະ ລາວໄດ້ບິນໄປດ້ວຍປີກສອງປີກ.

[3]ແຕ່ລະຕົນກໍຮ້ອງອອກມາຫາກັນ ແລະ ກັນ ແລະ ກ່າວວ່າ, "ບໍຣິສຸດ, ບໍຣິສຸດ, ບໍຣິສຸດ, ຄືພຣະຢາເວຈອມໂຢທາ! ແຜ່ນດິນໂລກທັງ
ຫມົດເຕັມໄປດ້ວຍພຣະຣັດສະຫມີຂອງພຣະອົງ."
[4]ພື້ນຖານຂອງປະຕູທັງຫລາຍກໍສັ່ນສະເທືອນຍ້ອນວ່າສຽງຮ້ອງຂອງຄົນເຫລົ່ານັ້ນທີ່ກໍາລັງຮ້ອງອອກມາ, ແລະ ພຣະນິເວດກໍເຕັມໄປດ້ວຍຄວັນ.
[5]ແລ້ວຂ້າພະເຈົ້າກໍໄດ້ກ່າວວ່າ, “ວິບັດແກ່ຂ້າພະເຈົ້າ! ເພາະວ່າຂ້າພະເຈົ້າໄດ້ເຖິງຄາວຕາຍແລ້ວ ເພາະວ່າຂ້າພະ
ເຈົ້າເປັນຄົນທີ່ມີປາກບໍ່ສະອາດ, ແລະ ຂ້າພະເຈົ້າໄດ້ອາໄສຢູ່ໃນບັນດາຊົນຊາດທີ່ມີປາກບໍ່ສະອາດ,
ເພາະວ່າຕາຂອງຂ້າພະເຈົ້າໄດ້ເຫັນອົງກະສັດ, ອົງພຣະຢາເວ, ອົງພຣະຢາເວຈອມໂຢທາ!"
[6]ແລ້ວເສຣາພິມຕົນຫນຶ່ງໄດ້ບິນມາຫາຂ້າພະເຈົ້າ; ຊຶ່ງມີຖ່ານໄຟຮ້ອນແຮງຢູ່ໃນມື, ທີ່ໄດ້ເອົາຄີມຄີບອອກມາຈາກແທ່ນບູຊາ.[7]ເພິ່ນໄດ້ສໍາ
ພັດປາກຂອງຂ້າພະເຈົ້າດ້ວຍຖ່ານໄຟນັ້ນ ແລະ ກ່າວວ່າ, “ເບິ່ງເຖີດ, ສິ່ງນີ້ໄດ້ສໍາພັດປາກຂອງທ່ານແລ້ວ; ຄວາມຜິດບາບຂອງທ່ານ
ໄດ້ຖືກເອົາອອກໄປແລ້ວ, ແລະ ຄວາມບາບຂອງທ່ານໄດ້ຖືກຊໍາລະລ້າງໃຫ້ສະອາດແລ້ວ."
[8]ຂ້າພະເຈົ້າໄດ້ຍິນສຽງຂອງອົງພຣະຜູ້ເປັນເຈົ້າກ່າວວ່າ, "ຂ້າພະເຈົ້າຈະໃຊ້ຜູ້ໃດໄປ; ຜູ້ໃດຈະໄປແທນພວກເຮົາໄດ້?" ແລ້ວຂ້າພະເຈົ້າ
ໄດ້ທູນວ່າ, "ຂ້າພະອົງຢູ່ທີ່ນີ້ ຂໍຊົງໃຊ້ຂ້າພະອົງໄປເຖີດ."[9]ພຣະອົງໄດ້ຕັດວ່າ, “ຈົ່ງໄປເຖີດ ແລ້ວບອກກັບຊົນຊາດນີ້ວ່າ, 'ຈົ່ງຟັງ, ແຕ່ບໍ່ເຂົ້າໃຈ;
ຈົ່ງເບິ່ງ, ແຕ່ຈະເບິ່ງບໍ່ເຫັນ.'
[10]ຈົ່ງເຮັດໃຫ້ຫົວໃຈຂອງຊົນຊາດນີ້ບໍ່ມີຄວາມຮູ້ສຶກ, ແລະ ເຮັດໃຫ້ຫູຂອງພວກເຂົາເຄັ່ງຕຶງ, ແລະ ເຮັດໃຫ້ຕາຂອງພວກເຂົາບອດໄປ,
ຖ້າບໍ່ດັ່ງນັ້ນ ພວກເຂົາອາດຈະເຫັນດ້ວຍຕາຂອງພວກເຂົາ, ໄດ້ຍິນດ້ວຍຫູຂອງພວກເຂົາ, ແລະ ເຂົ້າໃຈດ້ວຍຫົວໃຈຂອງພວກເຂົາ,
ແລ້ວຫັນກັບມາ ແລະ ໄດ້ຮັບການຮັກສາໃຫ້ດີ."
[11]ຫຼັງຈາກນັ້ນ ຂ້າພະເຈົ້າໄດ້ທູນວ່າ, “ຂ້າແດ່ອົງພຣະຜູ້ເປັນເຈົ້າ, ອີກດົນປານໃດ?” ພຣະອົງໄດ້ຕອບວ່າ, "ຈົນກ່ວາເມືອງທັງຫລາຍ
ຈະຖືກທໍາລາຍເປັນຊາກ, ແລະ ບໍ່ມີຜູ້ຄົນອາໄສຢູ່, ແລະ ບ້ານເຮືອນກໍບໍ່ມີປະຊາຊົນ, ແລະ ແຜ່ນດິນນັ້ນໄດ້ຕົກຢູ່ໃນຄວາມເປົ່າປ່ຽວຢ່າງສິ້ນ
ເຊີງ,[12]ແລະ ຈົນກ່ວາພຣະຢາເວໄດ້ສົ່ງຊົນຊາດນັ້ນອອກໄປໄກ, ແລະ ບ່ອນເປົ່າຫວ່າງຂອງແຜ່ນດິນນັ້ນກໍກວ້າງຂວາງ.
[13]ເຖິງແມ່ນວ່າຍັງເຫລືອຫນຶ່ງໃນສິບຂອງຊົນຊາດນັ້ນຢູ່ໃນເມືອງນີ້, ເມືອງນີ້ຈະຖືກທໍາລາຍອີກ; ຄືກັບຕົ້ນແປກ ຫລື ຕົ້ນໂອກທີ່ຖືກຕັດລົງມາ ແລະ
ລໍາຕົ້ນຂອງມັນຍັງຄົງຢູ່, ແກ່ນພັນທີ່ບໍຣິສຸດກໍແມ່ນຢູ່ໃນເຫງົ້າຂອງມັນ."


generated on Tue Jun 17 19:01:42 2025

7 [1]ໃນລະຫວ່າງການປົກຄອງຂອງອາຮາດ ລູກຊາຍຂອງໂຢທາມຜູ້ທີ່ເປັນລູກຊາຍຂອງອຸດຊີຢາ, ກະສັດແຫ່ງຢູດາ, ເຣ
ຊີນກະສັດແຫ່ງອາຣາມ, ແລະ ເປກາລູກຊາຍຂອງກະສັດເຣມາລີຢາ, ກະສັດແຫ່ງອິດສະຣາເອນ, ໄດ້ຂຶ້ນໄປເຖິງນະ
ຄອນເຢຣູຊາເລັມເພື່ອໄປສູ້ຮົບກັບເມືອງນັ້ນ, ແຕ່ພວກເຂົາບໍ່ສາມາດຕໍ່ສູ້ເພື່ອເອົາຊະນະເມືອງນັ້ນໄດ້.
[2]ເມື່ອມີຄົນລາຍງານເລື່ອງຕໍ່ຣາ
ຊວົງຂອງດາວິດວ່າອາຣາມໄດ້ຮ່ວມມືກັບເອຟາອີມແລ້ວ. ຫົວໃຈຂອງພຣະອົງ ແລະ ໃຈຂອງປະຊາຊົນຂອງພຣະອົງ
ກໍສັ່ນສະເທືອນຄືກັບຕົ້ນໄມ້ໃນປ່າທີ່ສັ່ນໄຫວໃນກະແສລົມ.

[3]ຈາກນັ້ນພຣະຢາເວໄດ້ກ່າວກັບເອຊາຢາວ່າ, "ຈົ່ງອອກໄປກັບເອຊາຢາຊຸບລູກຊາຍຂອງທ່ານເພື່ອໄປເຝົ້າອາຮາດທີ່ປາຍທໍ່ສົ່ງນ້ຳຂອງສະ
ນ້ຳທາງເທິງ, ເທິງເສັ້ນທາງໄປຫາພື້ນທີ່ຂອງຊ່າງຊັກເຄື່ອງ.
[4]ຈົ່ງບອກລາວວ່າ, 'ຈົ່ງລະວັງໃຫ້ດີ, ຈົ່ງສະຫງົບໄວ້, ຢ່າຢ້ານກົວຫລືຢ່າໃຫ້ຄົນຟື້ນທີ
ໃກ້ຈະມອດທັງສອງອັນນີ້ມາຂົ່ມຂູ່ໄດ້, ຈາກຄວາມໂກດແຄ້ນຂອງເຣຊີນ ແລະ ອາຣາມ, ແລະ ຈາກເປກາລູກຊາຍຂອງເຣມາລີຢາ.
[5]ອາຣາມ, ເອຟາອີມ, ແລະລູກຊາຍຂອງເຣມາລີຢາໄດ້ວາງແຜນທີ່ຊົ່ວຮ້າຍຕໍ່ທ່ານ; ພວກເຂົາໄດ້ເວົ້າວ່າ,
[6]ຂໍໃຫ້ພວກເຮົາໂຈມຕີຢູດາ ແລະ ເຮັດ
ໃຫ້ເມືອງນັ້ນຢ້ານ, ແລະ ໃຫ້ພວກເຮົາບຸກລຸກເຂົ້າໄປໃນເມືອງນັ້ນ ແລະ ແຕ່ງຕັ້ງລູກຊາຍຂອງຕາເບເອນ, ໃຫ້ເປັນກະສັດຂອງພວກເຮົາຢູ່ທີ່ນັ້ນ."
[7]ພຣະຢາເວພຣະຜູ້ເປັນເຈົ້າໄດ້ກ່າວວ່າ, "ມັນຈະບໍ່ເປັນແບບນັ້ນ; ມັນຈະບໍ່ເກີດຂຶ້ນ,
[8]ເພາະຫົວຂອງອາຣາຄືດາມາເຊ, ແລະ
ຫົວຂອງດາມາເຊຄືເຣຊີນ. ເອຟຣາອີມຈະຖືກເຮັດໃຫ້ກະຈັດກະຈາຍໄປ ແລະ ຈະບໍ່ເປັນຊົນຊາດອີກຕໍ່ໄປພາຍໃນຫົກສິບ-ຫ້າປີ,
[9]ຫົວຂອງເອຟຣາອີມກໍຄືຊາມາເຣຍ, ແລະ ຫົວຂອງຊາມາເຣຍກໍຄືລູກຊາຍຂອງເຣມາລີຢາ. ຖ້າທ່ານບໍ່ຢູ່ໃນຄວາມເຊື່ອຂອງທ່ານ,
ທ່ານກໍຈະຍັງບໍ່ປອດໄພແນ່ນອນ."''
[10]ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບອາຮາດອີກວ່າ,
[11]“ຈົ່ງທູນຂໍເຄື່ອງຫມາຍສຳຄັນຂອງພຣະຢາເວພຣະເຈົ້າຂອງທ່ານ; ຈົ່ງທູນຖາມເຄື່ອງຫມາຍສຳ
ຄັນນັ້ນໃນບ່ອນເລິກ ຫລື ໃນບ່ອນທີ່ສູງເຫນືອຂຶ້ນໄປກໍໄດ້."
[12]ແຕ່ອາຮາດໄດ້ກ່າວວ່າ, "ຂ້າພະເຈົ້າຈະບໍ່ທູນຂໍ, ແລະ ຂ້າພະ
ເຈົ້າຈະບໍ່ທົດລອງພຣະຢາເວ."
[13]ສະນັ້ນເອຊາຢາຈຶ່ງທູນຕອບວ່າ, "ຣາຊວົງຂອງດາວິດ. ຂໍຊົງຟັງການທີ່ພຣະອົງທົດສອບຄວາມອົດທົນຂອງປະຊາຊົນນັ້ນຍັງບໍ່ພໍຫລື? ພຣະ
ອົງຍັງຕ້ອງທົດສອບຄວາມອົດທົນຂອງພຣະເຈົ້າຂອງຂ້າພະອົງອີກດ້ວຍຫລື?
[14]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າເອງຈະປະທານຫມາຍສຳ
ຄັນແກ່ພຣະອົງ ແລະ ປະຊາຊົນຢ່າງຫນຶ່ງ: ເບິ່ງເຖີດ, ຍິງສາວຄົນຫນຶ່ງຈະຖືພາ, ແລະ ໃຫ້ກຳເນີດລູກຊາຍຄົນຫນຶ່ງ,
ແລະຈະເອີ້ນຊື່ຂອງລາວວ່າ ເອມານູເອນ.
[15]ລາວຈະກິນນົມຊຸ້ນ ແລະ ນ້ຳເຜິ້ງ ເມື່ອຮອດເວລາທີ່ລາວຮູ້ຈັກການປະຕິເສດຄວາມຊົ່ວ ແລະ
ເລືອກຄວາມດີ.
[16]ເພາະວ່າກ່ອນເດັກຊາຍຄົນນັ້ນຈະຮູ້ຈັກປະຕິເສດຄວາມຊົ່ວ ແລະ ເລືອກຄວາມດີ,
ແຜ່ນດິນທີ່ເປັນຂອງກະສັດທັງສອງອົງທີ່ພະອົງຊົງຢ້ານກົວຈະຖືກປະຖິ້ມ.
[17]ພຣະຢາເວຈະນຳເອົາເວລານັ້ນມາເຫນືອພຣະອົງ,
ເຫນືອຊົນຊາດຂອງພຣະອົງ, ແລະ ເຫນືອຣາຊະວົງຂອງພຣະບິດາຂອງພຣະອົງທີ່ບໍ່ຄືກັບຄັ້ງໃດ ຕັ້ງແຕ່ເອຟຣາອີມໄດ້ແຍກຈາກຢູດາ-
ພຣະຢາເວຈະນຳກະສັດແຫ່ງອັດຊີເຣຍມາເຫນືອພຣະອົງ.”
[18]ໃນເວລານັ້ນ ພຣະຢາເວຈະຊົງຜິວປາກເອີ້ນແມງວັນໂຕຫນຶ່ງມາຈາກແມ່ນ້ຳຂອງເອຢິບທີ່ຫ່າງໄກ, ແລະ ເອີ້ນເຜີ້ງໂຕຫນຶ່ງຈາກແຜ່ນດິນ
ຂອງອັດຊີເຣຍ.
[19]ພວກມັນທັງຫມົດຈະມາ ແລະ ລີ້ຢູ່ໃນຮ່ອມພູທັງຫມົດ, ໃນຮ່ອມຫີນ, ເທິງຕົ້ນໄມ້ທີ່ມີຫນາມທັງຫມົດ, ແລະ
ເທິງທົ່ງຫຍ້າທັງຫມົດ.
[20]ໃນເວລານັ້ນ ອົງພຣະຜູ້ເປັນເຈົ້າຈະຊົງໂກນຫົວ ແລະ ຂົນຂາ; ດ້ວຍມີດໂກນທີ່ຖືກເຊົ່າມາຈາກອີກຟາກຫນຶ່ງຂອງແມ່ນ້ຳເອຟຣາດ-
ຄືກະສັດແຫ່ງອັດຊີເຣຍ-ເຊິ່ງຈະແຖເອົາຫນວດເຄົາອອກໄປດ້ວຍ.
[21]ໃນວັນນັ້ນ, ຄົນຫນຶ່ງຈະລ້ຽງງົວໂຕແມ່ຫນຶ່ງໂຕ ແລະ ແກະສອງໂຕໃຫ້ມີຊີ
ວິດຢູ່,
[22]ແລະເພາະວ່າພວກມັນຈະໃຫ້ນົມຢ່າງຫລວງຫລາຍ, ລາວຈະກິນນົມຂົ້ນ, ເພາະວ່າທຸກຄົນທີ່ເຫລືອຢູ່ໃນແຜ່ນດິນນັ້ນຈະກິນນົມຂົ້ນ
ແລະ ນ້ຳເຜິ້ງ.
[23]ໃນເວລານັ້ນ, ບ່ອນໃດທີ່ເຄີຍມີເຄືອອະງຸ່ນຫນຶ່ງພັນເຄືອ ເຊິ່ງມີຄ່າເປັນເງິນຫນຶ່ງພັນເຊເຂວ, ກໍຈະບໍ່ມີຫຍັງເຫລືອເລີຍ ນອກຈາກພຸ່ມໄມ້ຫນາມ
ແລະ ພືດທີ່ມີຫນາມ.
[24]ຜູ້ຄົນຈະໄປທີ່ນັ້ນເພື່ອລ່າດ້ວຍລູກສອນ, ເພາະວ່າແຜ່ນດິນທັງຫມົດຈະເປັນພຸ່ມໄມ້ຫນາມ ແລະ ພືດມີຫນາມ.
[25]ພວກເຂົາຈະຢູ່ຫ່າງໄກຈາກທຸກໆພູທີ່ຖືກຂຸດດ້ວຍຊ້ວນ, ເພາະຄວາມຢ້ານກົວພຸ່ມໄມ້ຫນາມ ແລະ ພືດທີ່ມີຫນາມ;
ແຕ່ແຜ່ນດິນນັ້ນຈະເປັນບ່ອນທີ່ມີຝູງງົວ ແລະ ຝູງແກະເລັມຫຍ້າ.


generated on Tue Jun 17 19:01:42 2025

8 [1]ພຣະຢາເວໄດ້ກ່າວກັບຂ້າພະເຈົ້າວ່າ, "ຈົ່ງນຳເອົາແຜ່ນຈາລຶກຂະໜາດໃຫຍ່ມາ ແລະ ຂຽນໃສ່ເທິງນັ້ນວ່າ, 'ມາເຮີຊາລານຫັດສະ
ບັດ.'[2]ຂ້າພະເຈົ້າຈະເອີ້ນພວກພະຍານທີ່ສັດຊື່, ຄືປະໂລຫິດອູຣີຢາ, ແລະ ເຊຄາຣີຢາລູກຊາຍຂອງເຢເບເຣກີຢາ
ມາເປັນພະຍານສຳລັບຂ້າພະເຈົ້າ."

[3]ຂ້າພະເຈົ້າໄດ້ໄປຫາຜູ້ປະກາດພຣະຄຳຍິງ, ແລະ ນາງໄດ້ຖືພາ ແລະ ໄດ້ເກີດລູກຊາຍຄົນໜຶ່ງ. ແລ້ວພຣະຢາເວໄດ້ກ່າວກັບຂ້າພະເຈົ້າວ່າ, "ຈົ
ງເອີ້ນຊື່ຂອງລາວວ່າ 'ມາເຮີຊາລານຫັດສະບັດ'[4]ເພາະວ່າກ່ອນທີ່ເດັກຊາຍຄົນນັ້ນຈະເອີ້ນວ່າ, 'ພໍ່ຂອງຂ້າພະເຈົ້າ,' ແລະ, 'ແມ່ຂອງຂ້າພະ
ເຈົ້າໄດ້,' ກະສັດແຫ່ງອັດຊີເຣຍຈະຂົນເອົາຊັບສິນຂອງດາມາເຊ ແລະ ສິ່ງຂອງທີ່ຍຶດມາໄດ້ຂອງຊາມາເຣຍໄປ."
[5]ພຣະຢາເວໄດ້ກ່າວກັບຂ້າພະເຈົ້າອີກວ່າ,[6]"ເພາະວ່າຜູ້ຄົນພວກນີ້ໄດ້ປະຕິເສດນ້ຳແຫ່ງຊີໂອລາທີ່ໄຫລອອກມາ, ແລະ ຍິນດີກັບເຣຊີນ ແລະ
ລູກຊາຍຂອງເຣມາລີຢາ,[7]ດັ່ງນັ້ນ ອົງພຣະຜູ້ເປັນເຈົ້າຈະນຳນ້ຳຂອງແມ່ນ້ຳນັ້ນ, ທີ່ມີອຳນາດ ແລະ ອຸດົມສົມບູນຂຶ້ນມາເໜືອພວກເຂົາ,
ຄືກະສັດແຫ່ງອັດຊີເຣຍ ແລະ ສະຫງ່າລາສີທັງຫມົດຂອງພຣະອົງ. ນ້ຳນັ້ນຈະໄຫລລົ້ນລຳຄອງທຸກແຫ່ງ ແລະ ຖ້ວມແຄມຝັ່ງຂອງລຳຄອງນັ້ນ.
[8]ແມ່ນ້ຳນັ້ນຈະໄຫລໄປສູ່ຢູດາ, ນ້ຳຖ້ວມ ແລະ ກະແສຍັງສືບຕໍ່ໄຫລໄປ, ຈົນກ່ວານ້ຳນັ້ນຈະຮອດຄໍຂອງຂ້າພະເຈົ້າ. ເອມານູເອນເອີຍ,
ປີກຂອງນ້ຳທີ່ກາງອອກຈະເຕັມໄປທົ່ວແຜ່ນດິນອັນກວ້າງໃຫຍ່ຂອງທ່ານ."
[9]ປະຊາຊົນທັງຫລາຍຈະຖືກທຳລາຍເປັນຕ່ອນໆ. ປະເທດທັງຫລາຍທີ່ຢູ່ຫ່າງໄກ: ຈົ່ງຟັງ, ຈົ່ງຖືອາວຸດຂອງຕົນເອງເພື່ອເຮັດສົງຄາມ ແລະ ຖືກທຳ
ລາຍເປັນຕ່ອນໆ;[10]ຈົ່ງວາງແຜນການ, ແຕ່ວ່າມັນຈະບໍ່ມີການກະທຳໃດໆເລີຍ; ຈົ່ງອອກຄຳສັ່ງ, ແຕ່ມັນກໍຈະບໍ່ມີການປະຕິບັດ,
ເພາະວ່າພຣະເຈົ້າສະຖິດຢູ່ກັບພວກເຮົາ.
[11]ພຣະຢາເວໄດ້ກ່າວກັບຂ້າພະເຈົ້າວ່າ, ດ້ວຍມືອັນເຂັ້ມແຂງຂອງພຣະອົງຢູ່ຂ້າງເທິງຂ້າພະເຈົ້າ, ແລະ
ໄດ້ຊົງເຕືອນຂ້າພະເຈົ້າບໍ່ໃຫ້ຍ່າງໄປໃນທາງຂອງຊົນຊາດນີ້.[12]ສິ່ງໃດກໍຕາມທີ່ຊົນຊາດນີ້ເອີ້ນວ່າການສົມຮູ້ຮ່ວມຄິດ,
ຢ່າເອີ້ນວ່າການສົມຮູ້ຮ່ວມຄິດ ທ່ານຈະບໍ່ຢ້ານກົວສິ່ງທີ່ພວກເຂົາຢ້ານ, ແລະ ຢ່າຫວາດຫວັ່ນ.[13]ພຣະຢາເວຈອມໂຍທານີ້ແຫລະທີ່ຈະຖວາຍພຣະ
ກຽດໃຫ້ເປັນອົງບໍຣິສຸດ; ພຣະອົງຊົງເປັນຜູ້ທີ່ທ່ານຕ້ອງຢ້ານກົວ, ແລະ ພຣະອົງຊົງເປັນຜູ້ທີ່ທ່ານຕ້ອງຫວາດຫວັ່ນ.
[14]ພຣະອົງຈະເປັນສະຖານທີ່ນະມັດສະການ; ແຕ່ພຣະອົງຈະເປັນຫີນທີ່ກະທົບ, ແລະ ເປັນສີລາທີ່ເຮັດໃຫ້ສະດຸດ-
ສຳລັບເຊື້ອສາຍອິດສະຣາເອນທັງສອງເຊື້ອສາຍ, ແລະ ພຣະອົງຈະກາຍເປັນກັບດັກ ແລະ ບ່ວງແຮ້ວຕໍ່ປະຊາຊົນນະຄອນເຢຣູຊາເລັມ.
[15]ຫລາຍຄົນຈະສະດຸດລົງເທິງຫີນ ແລະ ລົ້ມລົງ ແລະ ແຕກຫັກ, ແລະ ຕິດຢູ່ບ່ວງແຮ້ວ ແລະ ຈັບໂຕໄປ.
[16]ຈົ່ງຮັກສາຄຳເວົ້າຂອງພະຍານຂອງຂ້າພະເຈົ້າໄວ້, ຈົ່ງປະທັບຕາ ແລະ ບັນທຶກໄວ້ຢ່າງເປັນທາງການ, ແລະ ຈົ່ງເອົາມັນໃຫ້ພວກສາວົກຂອງຂ້າ
ພະເຈົ້າ.[17]ຂ້າພະເຈົ້າຈະລໍຖ້າພຣະຢາເວ, ຜູ້ທີ່ເຊື່ອງພຣະພັກຂອງພຣະອົງຈາກເຊື້ອສາຍຂອງຢາໂຄບ; ຂ້າພະເຈົ້າຈະລໍຖ້າພຣະອົງ.[18]ຈົ່ງເບິ່ງ,
ຂ້າພະເຈົ້າກັບພວກລູກຊາຍຂອງຂ້າພະເຈົ້າຜູ້ທີ່ພຣະຢາເວໄດ້ປະທານໃຫ້ຂ້າພະເຈົ້າເປັນເຄື່ອງຫມາຍສຳຄັນ ແລະ ການ
ອັດສະຈັນໃນອິດສະຣາເອນຈາກພຣະຢາເວຈອມໂຍທາ, ຜູ້ຊົງປະທັບຢູ່ເທິງພູເຂົາຊີໂອນ.
[19]ພວກເຂົາຈະບອກທ່ານວ່າ, "ຈົ່ງປຶກສາກັບຜູ້ຮັບໃຊ້ ແລະ ຄົນໃຊ້ເວດມົນ," ຄົນເຫລົ່ານັ້ນທີ່ຮ້ອງສຽງຈ໋ອກແຈ໋ກ ແລະ ຈົ່ມມົນ.
ແຕ່ຊົນຊາດໜຶ່ງບໍ່ຄວນທີ່ຈະປຶກສາກັບພະເຈົ້າຂອງພວກເຂົາບໍ? ພວກເຂົາຄວນຈະປຶກສາຄົນຕາຍແທນຄົນທີ່ມີຊີວິດຢູ່ບໍ?
[20]ຖ້າພວກເຂົາບໍ່ເວົ້າກ່ຽວກັບເລື່ອງນັ້ນຕໍ່ກົດບັນຍັດ ແລະ ຕໍ່ຄຳເວົ້າຂອງພະຍານ, ນັ້ນແມ່ນຍ້ອນວ່າພວກເຂົາບໍ່ມີຄວາມສະຫວ່າງ
ແຫ່ງແສງອາລຸນເລີຍ.
[21]ພວກເຂົາຈະຜ່ານເຂົ້າແຜ່ນດິນໄປດ້ວຍຄວາມທຸກຍາກລຳບາກ ແລະ ຄວາມອຶດຢາກຢ່າງແສນສາຫັດ. ໃນເວລາທີ່ພວກເຂົາຫິວ,
ພວກເຂົາຈະໃຈຮ້າຍ ແລະ ສາບແຊ່ງກະສັດ ແລະ ພະເຈົ້າຂອງພວກເຂົາ, ໃນຂະນະທີ່ພວກເຂົາເງີຍຫນ້າຂອງພວກເຂົາຂຶ້ນໄປ.
[22]ພວກເຂົາຈະແນມເບິ່ງແຜ່ນດິນໂລກ ແລະ ຈະເຫັນຄວາມທຸກຍາກ, ຄວາມມືດ, ແລະ ຄວາມເສົ້າສະຫລົດໃຈ.
ພວກເຂົາຈະຖືກຂັບໄລ່ເຂົ້າໄປໃນແຜ່ນດິນແຫ່ງຄວາມມືດ.

 generated on Tue Jun 17 19:01:42 2025

9 [1]ຄວາມໂສກເສົ້າຈະເລື່ອນຫາຍໄປຈາກເມືອງທີ່ກຳລັງທຸກລະທົມ. ໃນໄລຍະຜ່ານມາພຣະອົງໄດ້ເຮັດໃຫ້ແຜ່ນດິນເຊບູລຸນ ແລະ ນັບທາລີ
ເຮັດໃຫ້ອັບອາຍ, ແຕ່ຕໍ່ມາພຣະອົງຈະເດີນທາງໄປສູ່ທະເລອີກຝັ່ງຂອງຟາກແມ່ນ້ຳຈໍແດນ, ຄືຄາລີເລຂອງບັນດາປະຊາຊາດນັ້ນໃຫ້ຮຸ່ງເຮືອງ.
[2]ຊົນຊາດທີ່ໄດ້ຍ່າງຢູ່ໃນຄວາມມືດໄດ້ເຫັນຄວາມສະຫວ່າງຍິ່ງໃຫຍ່; ຄົນເຫລົ່ານັ້ນທີ່ຢູ່ໃນແຜ່ນດິນຂອງເງົາແຫ່ງຄວາມຕາຍ,
ແສງສະຫວ່າງສ່ອງມາໃສ່ພວກເຂົາ.

[3]ພຣະອົງໄດ້ຊົງທະວີຄູນຈຳນວນປະຊາຊາດນັ້ນ; ພຣະອົງໄດ້ຊົງເພີ່ມພູນຄວາມຊື່ນຊົມຍິນດີຂອງພວກເຂົາຫລາຍຂຶ້ນ.
ພວກເຂົາມີຄວາມປິຕິຍິນດີຕໍ່ພຣະພັກພຣະອົງໃນລະດູການເກັບກ່ຽວ, ຄືກັບຜູ້ທີ່ມີຄວາມສຸກໃນຂະນະທີ່ພວກເຂົາສາມາດແບ່ງປັນສ່ວນທີ່ຢຶດມາ
ໄດ້.
[4]ເພາະວ່າແອກອັນເປັນພາລະຫນັກຂອງລາວ, ແລະ ໄມ້ຄານທີ່ຢູ່ເທິງບ່າຂອງລາວ, ແລະ ໄມ້ເທົ້າຂອງຜູ້ທີ່ກົດຂີ່ລາວ, ພຣະອົງໄດ້ຊົງເຮັດ
ໃຫ້ກະແຈກກະຈາຍໄປຄືກັນກັບໃນວັນເວລາຂອງພວກມີດີອານ.[5]ເພາະວ່າເກີບທະຫານທຸກໆຄູ່ທີ່ຢຽບໃນຄວາມສັບສົນວຸ່ນວາຍ ແລະ
ເຄື່ອງນຸ່ງທີ່ຖືກເກືອກຢູ່ໃນເລືອດ, ຈະຖືກເຜົາເປັນເຊື້ອເພີງແກ່ໄຟ.
[6]ເດັກນ້ອຍຄົນຫນຶ່ງຈະເກີດມາເພື່ອພວກເຮົາ, ລູກຊາຍຄົນຫນຶ່ງໄດ້ຊົງປະທານແກ່ພວກເຮົາ; ແລະ ການຄອບຄອງຈະຢູ່ເທິງບ່າຂອງທ່ານ; ແລະ
ຈະເອີ້ນນາມຊື່ຂອງທ່ານວ່າເປັນທີ່ປຶກສາມະຫັດສະຈັນ, ພຣະເຈົ້າຜູ້ມີອຳນາດສູງສຸດ, ພະບິດານິລັນດອນ, ແລະ ອົງສັນຕິລາດ.[7]ການປົກ
ຄອງຂອງທ່ານຈະເພີ່ມຂຶ້ນ ແລະ ຈະມີສັນຕິລາດທີ່ບໍ່ມີທີ່ສິ້ນສຸດ, ເມື່ອພຣະອົງປົກຄອງເທິງບັນລັງຂອງດາວິດ, ແລະ ເຫນືອຣາຊອານາຈັກຂອງພ
ຣະອົງ, ເພື່ອສ້າງຕັ້ງ ແລະ ເຊີດຊູໄວ້ດ້ວຍຄວາມຍຸດຕິທຳ ແລະ ດ້ວຍຄວາມຊອບທຳຕັ້ງແຕ່ບັດນີ້ໄປຈົນຊົ່ວນິລັນ. ແຮງກະຕຸ້ນຂອງອົງພຣະຢາເວ
ຈອມໂຍທາຈະເຮັດດັ່ງນີ້.
[8]ອົງພຣະຜູ້ເປັນເຈົ້າໄດ້ພຣະວັດຈະນະມາຕໍ່ສູ້ຢາໂຄບ, ແລະ ພຣະວັດຈະນະນັ້ນໄດ້ຕົກລົງສູ່ອິດສະຣາເອນ.[9]ປະຊາຊົນທັງຫມົດຈະຮູ້,
ແມ່ນແຕ່ເອຟຣາອິມ ແລະ ຊາວຊາມາເຣຍ, ຜູ້ທີ່ກ່າວດ້ວຍຄວາມອວດອົ່ງ ແລະ ດ້ວຍໃຈຈອງຫອງວ່າ,
[10]“ກ້ອນດິນຈີ່ເຫລົ່ານັ້ນໄດ້ຖືກທຳລາຍແລ້ວ, ແຕ່ພວກເຮົາຈະສ້າງດ້ວຍຫີນແກະສະຫຼັກ; ບັນດາຕົ້ນຫມາກເດື່ອໄດ້ຖືກຕັດລົງແລ້ວ, ແຕ່ພວກ
ເຮົາຈະເອົາຕົ້ນແປກສີດາມາແທນທີ່ພວກມັນ."
[11]ດ້ວຍເຫດນີ້ ພຣະຢາເວຈະເຮັດໃຫ້ເຣຊິນທີ່ເປັນສັດຕູຂອງລາວຂຶ້ນມາຕໍ່ສູ້ກັບລາວ, ແລະ ຈະກະຕຸ້ນສັດຕູຂອງລາວ,[12]ຄືຄົນຂອງອາຣາມໃນ
ທິດຕາເວັນອອກ, ແລະ ພວກຟີລິດສະຕິນຢູ່ທາງທິດຕາເວັນຕົກ. ພວກເຂົາຈະອ້າປາກຂອງພວກເຂົາ ແລະ ກືນກິນອິດສະຣາເອນ.
ໃນເຫດການທັງຫມົດເຫລົ່ານີ້, ຄວາມໂກດແຄ້ນຂອງພຣະອົງກໍບໍ່ບັນເທົາລົງ; ແຕ່ວ່າພຣະຫັດຂອງພຣະອົງຍັງຢຽດອອກຢູ່.
[13]ແຕ່ປະຊາຊົນກໍຈະບໍ່ກັບມາຫາຜູ້ທີ່ຊົງຕີພວກເຂົາ, ແລະ ພວກເຂົາກໍຈະບໍ່ສະແຫວງຫາອົງພຣະຢາເວຈອມໂຍທາ.[14]ດ້ວຍເຫດນີ້
ພຣະຢາເວຈະຊົງຕັດຫົວ ແລະ ຫາງອອກຈາກອິດສະຣາເອນ, ທັງງ່າປາມ ແລະ ຕົ້ນກົກ, ໃນມື້ດຽວ.[15]ພວກຜູ້ນຳ ແລະ ຄົນສູງສົ່ງຄືຫົວ; ແລະ
ພວກສາດສະດາທີ່ສອນບໍ່ຖືກຕ້ອງກໍຄືຫາງ.
[16]ຄົນເຫລົ່ານັ້ນທີ່ນຳພາຊົນຊາດນີ້ເຮັດໃຫ້ພວກເຂົາຫລົງທາງ, ແລະ ພວກຄົນທີ່ຄົນເຫລົ່ານີ້ນຳໄປກໍຖືກກືນກິນ.[17]ເພາະສະນັ້ນ
ອົງພຣະຜູ້ເປັນເຈົ້າຈະບໍ່ພໍໃຈກັບພວກຄົນຫນຸ່ມ ຂອງພວກເຂົາ ແລະ ພຣະອົງຈະບໍ່ມີຄວາມເມດຕາຕໍ່ລູກທີ່ກຳພ້າພໍ່ ແລະ
ແມ່ຫມ້າຍຂອງພວກເຂົາ, ເພາະວ່າທຸກຄົນລ້ວນບໍ່ມີພຣະເຈົ້າ ແລະ ເປັນຄົນຊົ່ວ, ແລະ ທຸກໆປາກເວົ້າສິ່ງຕ່າງໆທີ່ໂງ່ຈ້າ.
ໃນເຫດການທັງຫມົດເຫລົ່ານີ້, ຄວາມໂກດແຄ້ນຂອງພຣະອົງກໍຈະບໍ່ບັນເທົາລົງ; ແຕ່ວ່າ, ພຣະຫັດຂອງພຣະອົງຍັງຍຽດອອກຢູ່.
[18]ຄວາມອະທຳກໍຈະເຜົາຜານຄືກັບໄຟ; ມັນເຜົາຜານພຸ່ມໄມ້ຫນາມ ແລະ ພືດທີ່ມີຫນາມ; ມັນເຜົາໄຫມ້ພຸ່ມໄມ້ທີ່ທຶບຫນາໃນປ່າ,
ເຊິ່ງກໍໃຫ້ເກີດເປັນກຸ່ມຄວັນຂຶ້ນມາ.[19]ຍ້ອນຄວາມຄຽດແຄ້ນຂອງພຣະຢາເວຈອມໂຍທາ ແຜ່ນດິນນັ້ນກໍຖືກ ໄຫມ້, ແລະ ຊົນຊາດນັ້ນ
ກໍເປັນຄືກັບນ້ຳມັນໃຫ້ເຊື້ອໄຟ. ບໍ່ມີໃຜໄວ້ຊີວິດພີ່ນ້ອງຂອງຕົນ.
[20]ພວກເຂົາຈະຈັບເອົາອາຫານໄວ້ຢູ່ໃນມືຂວາ ແຕ່ກໍຍັງຄົງຫິວໂຫຍຢູ່; ພວກເຂົາຈະກິນອາຫານຢູ່ໃນມືຊ້າຍແຕ່ກໍຈະບໍ່ອີ່ມ. ແຕ່ລະຄົນຈະກິນກະ
ທັ້ງເນື້ອຫນັງຂອງແຂນຕົນເອງ.[21]ມານາເຊຈະກືນກິນເອຟຣາອິມ, ແລະ ເອຟຣາອິມ, ກໍຈະກືນກິນມານາເຊ; ແລະ
ພວກເຂົາຈະຕໍ່ສູ້ກັບຢູດາຮ່ວມກັນ. ໃນເຫດການທັງຫມົດນີ້, ຄວາມໂກດແຄ້ນຂອງພຣະອົງກໍບໍ່ໄດ້ບັນເທົາລົງ; ກົງກັນຂ້າມ, ແຕ່ວ່າພຣະ
ຫັດຂອງພຣະອົງຍັງຢຽດອອກຢູ່.


generated on Tue Jun 17 19:01:42 2025

10 [1]ວິບັດແກ່ຜູ້ທີ່ອອກກົດຫມາຍທີ່ບໍ່ເປັນທຳ ແລະ ຂຽນບົດບັນຍັດທີ່ບໍ່ຍຸດຕິທຳ.[2]ພວກເຂົາຂັບໄລ່ຜູ້ທີ່ຕ້ອງການຄວາມຍຸດຕິທຳ,
ລັກເອົາສິດຂອງຄົນທຸກຍາກຂອງຊາດຂອງພວກເຮົາ, ຍຶດຊັບສິນຂອງແມ່ຫມ້າຍ, ແລະ
ເຮັດໃຫ້ເດັກນ້ອຍກຳພ້າພໍ່ເປັນເຫຍື່ອຂອງພວກເຂົາ

[3]ພວກເຈົ້າຈະເຮັດແນວໃດໃນວັນພິພາກສາ? ໃນເວລາທີ່ການທຳລາຍມາຈາກດິນແດນທີ່ຫ່າງໄກ?
ພວກເຈົ້າຈະຫນີໄປຂໍຄວາມຊ່ວຍເຫລືອຈາກໃຜ, ແລະ ເຈົ້າຈະປະຊັບສົມບັດຂອງເຈົ້າຢູ່ບ່ອນໃດ?[4]ບໍ່ມີຫຍັງຄົງເຫລືອເລີຍ, ແລະ
ເຈົ້າກໍຫມູບຢູ່ທ່າມກາງບັນດານັກໂທດ ຫລື ລົ້ມລົງຢູ່ໃນບັນດາຜູ້ຄົນທີ່ຖືກຂ້າ. ໃນເຫດການທັງຫມົດນີ້, ຄວາມໂກດຮ້າຍຂອງພຣະອົງກໍບໍ່ບັນເທົາ
ລົງໄດ້; ແຕ່ມືຂອງພຣະອົງຍັງຢຽດອອກຢູ່.
[5]ວິບັດແກ່ຊາວອັດຊີເຣຍແມ່ນໃຜເປັນຜູ້ຄຶງຄວາມໂກດແຄ້ນຂອງຂ້ອຍ
ແລະແມ່ນຕົ້ນໄມ້ທີ່ພວກເຮົາໃຊ້ເປັນເຄື່ອງມືເພື່ອຕ້ານກັບຄວາມໂກດແຄ້ນຂອງພວກເຮົາ [6]ຂ້າພະເຈົ້າໄດ້ສົ່ງລາວຕໍ່ຕ້ານກັບຄົນທີ່ຈອງຫອງ ແລະ
ໄດ້ຕໍ່ສູ້ກັບຜູ້ຄົນທີ່ຮັບຜິດຊອບຄວາມໂກດແຄ້ນຂອງພວກເຮົາຂ້າພະເຈົ້າສັ່ງໃຫ້ລາວເອົາຂອງທີ່ຟັ່ງມາ. ເອົາໂຈນ
ແລະຢຽບພວກເຂົາຄືກັບຂີ້ຕົມຢູ່ຕາມຖະໜົນ
[7]ແຕ່ນີ້ບໍ່ແມ່ນສິ່ງທີ່ລາວຕັ້ງໃຈ, ແລະ ລາວກໍບໍ່ຄິດແບບນີ້. ແຕ່ການທຳລາຍ ແລະ ກຳຈັດເຊື້ອຊາດຕ່າງໆທັງຫລາຍກໍຢູ່ໃນໃຈຂອງລາວ.
[8]ເພາະລາວເວົ້າ, "ບັນດາເຈົ້າຊາຍຂອງຂ້າພະເຈົ້າທັງຫມົດແມ່ນກະສັດບໍ່ແມ່ນບໍ?[9]ເມືອງການໂນ ບໍ່ຄືກັນກັບເມືອງກາເກມິດບໍ?
ເມືອງຮາມັດບໍ່ຄືກັນກັບອາປາດບໍ? ເມືອງຊາມາເຣຍບໍ່ຄືກັນກັບເມືອງດາມາເຊບໍ?
[10]ເຫມືອນດັ່ງມືຂອງຂ້າພະເຈົ້າທີ່ເອົາຊະນະອານາຈັກທັງຫມົດ,
ທີ່ບູຊາຮູບເຄົາລົບຮູບປັ້ນຂອງເຂົາແມ່ນຍິ່ງໃຫຍ່ກວ່າຮູບເຄົາລົບເຫລົ່ານັ້ນຂອງເຢຣູຊາເລັມ ແລະ ເມືອງຊາມາເຣຍ,
[11]ຂ້າພະເຈົ້າຈະບໍ່ເຮັດກັບເຢຣູຊາເລັມ ແລະ ຮູບເຄົາລົບຂອງເມືອງຄືກັນກັບທີ່ຂ້ອຍໄດ້ເຮັດຕໍ່ຊາມາເຣຍ
ແລະຮູບເຄົາລົບທີ່ບໍ່ມີຄ່າຂອງເມືອງນັ້ນບໍ?"
[12]ເມື່ອພຣະຜູ້ເປັນເຈົ້າໄດ້ສຳ ເລັດວຽກຂອງລາວຢູ່ເທິງພູສີໂອນ ແລະ
ໃນເມືອງເຢຣູຊາເລັມຂ້າພະເຈົ້າຈະລົງໂທດຄຳເວົ້າຈາກຫົວໃຈທີ່ໜ້າພູມໃຈຂອງບັນດາກະສັດອັດຊີເຣຍແລະສາຍຕາທີ່ໜ້າພູມໃຈຂອງພວກເຂົາ.
[13]ເພາະລາວເວົ້າ "ຂ້ອຍໄດ້ເຮັດດ້ວຍສຸດກຳລັງແລະດ້ວຍປັນຍາຂອງຂ້ອຍ. ຂ້ອຍມີຄວາມເຂົ້າໃຈ ແລະ
ຂ້າພະເຈົ້າໄດ້ຍ້າຍຊາຍແດນຂອງປະຊາຊົນອອກໄປຂ້າພະເຈົ້າໄດ້ລັກຊັບຂອງເຂົາເຈົ້າ.
ແລະຂ້າພະເຈົ້າໄດ້ເອົາຊະນະປະຊາຊົນຄືກັນກັບງົວຫນຸ່ມ
[14]ມືຂອງຂ້າພະເຈົ້າມີຊັບສົມບັດຂອງປະຊາຊາດຄືກັບເອົາຈາກຮັງນົກ. ແລະ ຜູ້ຄົນຈະເກັບໄຂ່ນົກທີ່ປະໄວ້ໄວ້ແນວໃດ?
ຂ້າພະເຈົ້າໄດ້ເກັບກຳແຜ່ນດິນທັງໝົດແລ້ວ. ບໍ່ມີໃຜຍ້າຍປີກຂອງລາວໄປ. ຫລືເປີດປາກຂອງພວກເຂົາຫລືເຮັດສຽງດັງ."
[15]ຕັດທອນລາຍຈ່າຍສາມາດໂອ້ອວດຕົວເອງກັບຄົນທີ່ໃຊ້ມັນເປັນເຄື່ອງມືບໍ? ສຽງທີ່ເຫັນແລ້ວຈະຍ້ອງຍໍຕົວເອງດີກ່ວາຜູ້ທີ່ໃຊ້ບໍ?
ມັນແມ່ນຄືກັບໄມ້ເທົ້າທີ່ຍົກຄົນໃຫ້ຈັບມັນຫລືບໍ່. ຫລືຄືກັບວ່າມີໄມ້ຂະໜາດໜຶ່ງ, ຄົນໜຶ່ງ ຈະຍົກມັນໄດ້ບໍ? [16]ດ້ວຍເຫດຜົນນີ້
ພຣະເຈົ້າຢາເວຈະສົ່ງຄວາມຜອມຈ່ອຍໃຫ້ບັນດານັກຮົບທີ່ດີເລີດຂອງລາວ. ແລະ ພາຍໃຕ້ກຽດສັກສີຂອງລາວຈະມີລຸກໄໝ້ຄ້າຍຄືໄຟ
[17]ແສງສະຫວ່າງຂອງອິດສະຣາເອນຈະຖືກໄຟໄຫມ້. ແລະ ຜູ້ບໍລິສຸດຂອງພຣະອົງຈະເປັນແປວໄຟ. ໄຟນັ້ນຈະໄໝ້
ແລະພວນຕົ້ນໄມ້ໜາມຂອງມັນແລະພຸ່ມໄມ້ ໜາມໃນມື້ດຽວ.[18]ພຣະຜູ້ເປັນເຈົ້າຈະທຳ ລາຍສະຫງ່າລາສີຂອງປ່າໄມ້ຂອງລາວ
ແລະແຜ່ນດິນອຸດົມສົມບູນຂອງລາວລວມທັງຈິດໃຈແລະຮ່າງກາຍມັນຈະເປັນຄືກັບທີ່ຊີວິດຂອງຄົນເຈັບໄດ້ຫາຍໄປ.
[19]ຕົ້ນໄມ້ທັງໝົດທີ່ຍັງຄົງຢູ່ໃນປ່າຂອງລາວຈະສັ້ນລົງ. ຈົນກ່ວາເດັກສາມາດນັບເລກໄດ້
[20]ໃນວັນນັ້ນ, ຄົນອິດສະຣາເອນທີ່ເຫລືອຢູ່, ເຊື້ອສາຍຂອງຢາໂຄບທີ່ໄດ້ລອດຊີວິດ, ຈະບໍ່ເພິ່ງພາອາໄສຜູ້ທີ່ໂຈມຕີພວກເຂົາອີກຕໍ່ໄປ,
ແຕ່ຈະເພິ່ງພາໃນພຣະຢາເວ, ອົງບໍຣິສຸດຂອງອິດສະຣາເອນດ້ວຍຈິງໃຈ.[21]ຄົນທີ່ເຫລືອຢູ່ຂອງຢາໂຄບຈະກັບມາຫາພຣະເຈົ້າຜູ້ຊົງຣິດອຳນາດ.
[22]ເພາະເຖິງແມ່ວ່າຊົນຊາດຂອງເຈົ້າ, ອິດສາຣະເອນ, ເປັນດັ່ງດິນຊາຍທີ່ຢູ່ແຄມທະເລ, ຄົນທີ່ເຫລືອຢູ່ຂອງພວກເຂົາເທົ່ານັ້ນຈະກັບມາ.
ການທຳລາຍນັ້ນໄດ້ຖືກກຳຫນົດໄວ້ແລ້ວ, ຕາມທີ່ຄວາມຊອບທຳຢ່າງເຫລືອລົ້ນຕ້ອງການ.[23]ເພາະພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາ,
ຈະເຮັດການທຳລາຍຕາມທີ່ກຳຫນົດໄວ້ຕະຫລອດທົ່ວແຜ່ນດິນ.
[24]ດ້ວຍເຫດນີ້ ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ, "ຊົນຊາດຂອງເຮົາຜູ້ທີ່ອາໄສຢູ່ໃນຊີໂອນເອີຍ, ຢ່າຢ້ານກົວຄົນອັດຊີເຣຍ.
ເຂົາຈະຕີພວກເຈົ້າດ້ວຍໄມ້ຄ້ອນ ແລະ ຍົກໄມ້ຂອງເຂົາມາຕໍ່ສູ້ກັບພວກເຈົ້າ, ເຫມືອນຢ່າງທີ່ຄົນເອຢິບໄດ້ເຮັດນັ້ນ.[25]ຢ່າຢ້ານເຂົາເລີຍ,
ເພາະອີກບໍ່ດົນຄວາມໃຈຮ້າຍຂອງເຮົາທີ່ມີຕໍ່ພວກເຈົ້າຈະສິ້ນສຸດລົງ, ແລະຄວາມໃຈຮ້າຍຂອງເຮົາຈະມຸ່ງໄປສູ່ການທຳລາຍຂອງເຂົາ."
[26]ແລ້ວພຣະຢາເວຈອມໂຍຈະໃຊ້ໄມ້ແສ້ຕໍ່ສູ້ກັບພວກເຂົາ, ເຫມືອນກັບຕອນທີ່ພຣະອົງຊົງໂຈມຕີຄົນມີເດຍທີ່ຫີນແຫ່ງໂອເຣັບ.
ພຣະອົງຈະຊົງຍົກໄມ້ຄ້ອນຂອງພຣະອົງຂຶ້ນມາເຫນືອທະເລແລະ ຈະຊົງຍົກຂຶ້ນຢ່າງທີ່ໄດ້ຊົງເຮັດໃນເອຢິບ.[27]ໃນວັນນັ້ນ,
ພາລະຫນັກຂອງເຂົາຈະຖືກຍົກອອກຈາກບ່າຂອງພວກເຈົ້າ ແລະ ແອກຂອງເຂົາອອກຈາກຄໍຂອງພວກເຈົ້າ, ແລະ
ແອກນັ້ນຈະຖືກທຳລາຍເພາະຄວາມຕຸ້ຍ.
[28]ສັດຕູໄດ້ມາເຖິງອາອີແລ້ວ ແລະ ໄດ້ຜ່ານມິກໂຣນໄປແລ້ວ; ເຂົາໄດ້ເກັບອາຫານຂອງເຂົາໄວ້ທີ່ມິກມາດ.
[29]ພວກເຂົາໄດ້ຂ້າມຜ່ານຫົນທາງນັ້ນມາແລ້ວ ແລະ ພວກເຂົາພັກອາໃສທີ່ເກບາ. ຣາມາກໍຕົວສັ່ນ ແລະ ກິເບອາຂອງໂຊນກໍຫນີໄປແລ້ວ.
[30]ລູກສາວຂອງການລິມເອີຍ! ຈົ່ງຮ້ອງສຽງດັງ, ໄລຊາເອີຍ! ຈົ່ງໃຫ້ຄວາມສົນໃຈ ເຈົ້າອານາທົດທີ່ຫນ້າເມດຕາ![31]ມັດເມນາກຳລັງຫນີໄປ, ແລະ
ຊາວເມືອງເກບິມກໍຫນີໄປຫາທີ່ປອດໄພ.[32]ມື້ນີ້ເອງທີ່ເຂົາຈະຢຸດຢູ່ທີ່ເມືອງໂນບ ແລະ ສັ່ນກຳປັ້ນຂອງເຂົາ ເຂົ້າໃສ່ພູເຂົາລູກສາວແຫ່ງຊີໂອນ,
ເຂົ້າໃສ່ເນີນເຂົາແຫ່ງເຢຣູຊາເລັມ.
[33]ເບິ່ງເຖີດ, ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາຈະຊົງຕັດກິ່ງດ້ວຍການທຳລາຍທີ່ຫນ້າຢ້ານກົວ;
ບັນດາຕົ້ນໄມ້ທີ່ສູງທີ່ສຸດຈະຖືກໂຄ່ນລົງມາ, ແລະ ຄົນສູງສັກຈະຖືກເຮັດໃຫ້ຕ່ຳລົງ.[34]ພຣະອົງຈະຊົງຕັດພຸ່ມໄມ້ຫນາທຶບໃນປ່າລົງມາດ້ວຍຂວານ,
ແລະ ເລບານອນໃນຄວາມສະຫງ່າງາມຂອງເຂົາຈະລົ້ມລົງ.

11 [1]ຫນໍ່ຫນຶ່ງຈະງອກມາຈາກຕໍຂອງເຈຊີ, ແລະກິ່ງຫນຶ່ງທີ່ງອກອອກມາຈາກຮາກຂອງເຂົາຈະເກີດຜົນ.
[2]ພຣະວິນຍານຂອງພຣະຢາເວຈະສະຖິດຢູ່ເທິງທ່ານ, ຄືພຣະວິນຍານແຫ່ງປັນຍາແລະ ຄວາມເຂົ້າໃຈ, ພຣະວິນຍານແຫ່ງການສອນແລະ
ຣິດເດດ, ພຣະວິນຍານແຫ່ງຄວາມຮູ້ ແລະຄວາມຢຳເກງພຣະຢາເວ.

[3]ຄວາມຢຳເກງອົງພຣະຜູ້ເປັນເຈົ້າເປັນຄວາມປິຕິຍິນດີຂອງທ່ານ; ທ່ານຈະບໍ່ພິພາກສາຕາມສິ່ງທີ່ຕາຂອງທ່ານເບິ່ງເຫັນ, ແລະ
ຈະບໍ່ຕັດສິນຕາມສິ່ງທີ່ຫູຂອງທ່ານໄດ້ຍິນ.[4]ແຕ່ທ່ານຈະພິພາກສາຄົນຍາກຈົນ ດ້ວຍຄວາມຊອບທຳ
ແລະຕັດສິນໃຫ້ກັບຄົນຕໍ່າຕ້ອຍຂອງແຜ່ນດິນຢ່າງເປັນທຳ. ທ່ານຈະຕີແຜ່ນດິນໂລກດ້ວຍໄມ້ຄ້ອນຈາກປາກຂອງທ່ານ, ແລະ
ທ່ານຈະປະຫານຄົນອາທຳດ້ວຍລົມຈາກຮີມຝີປາກຂອງທ່ານ.[5]ຄວາມຊອບທຳຈະເປັນສາຍຄາດເອວຂອງທ່ານ, ແລະ
ຄວາມສັດຊື່ຈະເປັນສາຍຄາດສະໂພກຂອງທ່ານ.
[6]ຫມາປ່າຈະຢູ່ກັບລູກແກະ, ແລະ ເສືອດາວຈະນອນຢູ່ກັບລູກແກະ, ລູກງົວ, ສິງໂຕຫນຸ່ມ ແລະ ລູກງົວຕຸ້ຍ, ຈະຢູ່ນຳກັນ.
ເດັກນ້ອຍໆຈະນຳພວກມັນໄປ.[7]ແມ່ງົວກັບຫມີຈະຫາກິນນຳກັນ, ແລະ ລູກໆຂອງພວກມັນຈະນອນຢູ່ນຳກັນ. ສິງໂຕຈະກິນຟາງເຫມືອນກັບງົວຜູ້.
[8]ເດັກເກີດໃຫມ່ຈະຫລິ້ນຢູ່ທີ່ປາກຮູຂອງງູ, ແລະ ເດັກທີ່ເຊົານົມຈະເອົາມືຂອງເຂົາວາງເທິງຮັງຂອງງູພິດ.[9]ພວກມັນຈະບໍ່ເຮັດເຈັບປວດຫລື
ທຳລາຍກັນທົ່ວທັງພູເຂົາບໍລິສຸດຂອງເຮົາ; ເພາະແຜ່ນດິນໂລກຈະເຕັມດ້ວຍຄວາມຮູ້ຂອງພຣະຢາເວ, ເຫມືອນນ້ຳທີ່ປົກຄຸມທະເລ.
[10]ໃນວັນນັ້ນ, ຮາກຂອງເຈຊີຈະຕັ້ງຂຶ້ນເປັນທຸງສັນຍານແກ່ຊົນຊາດທັງຫລາຍ. ບັນດາປະຊາຊົນຈະສະແຫວງຫາພຣະອົງ, ແລະ
ສະຖານທີ່ພັກຜ່ອນຂອງພຣະອົງຈະຮຸ່ງເຮືອງ.[11]ໃນວັນນັ້ນ,
ອົງພຣະຜູ້ເປັນເຈົ້າຈະຊົງຢື່ນມືຂອງພຣະອົງອີກຄັ້ງເພື່ອນຳຄົນທີ່ເຫລືອຢູ່ຂອງຊົນຊາດຂອງພຣະອົງກັບຄືນມາ ຜູ້ທີ່ຍັງຄົງຢູ່ໃນອັດຊີເຣຍ, ເອຢິບ,
ປັດໂຣດ, ເອລາມ, ຊີນາ, ຮາມັດ, ແລະ ເກາະຕ່າງໆໃນທະເລ.
[12]ພຣະອົງຈະຊົງຍົກທຸງສັນຍານໃຫ້ແກ່ຊົນຊາດຕ່າງໆ ແລະ
ຈະຊົງຮວບຮວມຄົນທີ່ຖືກຂັບໄລ່ໄປຂອງອິດສະຣາເອນແລະຊົງຮວບຮວມຄົນຢູດາຍທີ່ກະແຈກກະຈາຍໄປຈາກທັງສີ່ມຸມຂອງແຜ່ນດິນໂລກ[13]ພຣະອົງຈະຊົງຫັນຄວາ
ແລະຄວາມເປັນສັດຕູຂອງຢູດາຍຈະຖືກຕັດອອກໄປ ເອຟຣາອິມຈະບໍ່ອິດສາຢູດາຍ ແລະຢູດາຍຈະບໍ່ເປັນສັດຕູກັບເອຟຣາອິມອີກຕໍ່ໄປ
[14]ແຕ່ພວກເຂົາຈະໂນມລົງເຫນືອເຂົາຂອງພວກຟີລິດສະຕິນທາງຕາເວັນຕົກ ແລະ
ພວກເຂົາຈະຮ່ວມກັນປຸ້ນຊົນຊາດທາງຕາເວັນອອກພວກເຂົາຈະໂຈມຕີເອໂດມແລະໂມອາບ ແລະ
ຄົນອຳໂມເຊື່ອຟັງພວກເຂົາ[15]ພຣະຢາເວຈະຊົງທຳລາຍອ່າວຂອງທະເລແຫ່ງອີຢິບໃຫ້ສິ້ນຊາກດ້ວບລົມທີ່ຮ້ອນຜ່າວຂອງພຣະອົງ
ພຣະອົງຈະຊົງໂບກມືຂອງພຣະອົງເຫນືອແມ່ນ້ຳຢູເຟຣຕີ ແລະ
ຈະຊົງແຍກແມ່ນ້ຳນັ້ນໃຫ້ເປັນລຳທານເຈັດສາຍເພື່ອໃຫ້ຄົນທີ່ໃສ່ເກີບຍ່າງຂ້າມໄປໄດ້
[16]ຈະມີທາງຫລວງສຳລັບຄົນທີ່ເຫລືອຢູ່ຂອງຊົນຊາດຂອງພຣະອົງທີ່ກັບມາຈາກອັດຊີເຣຍ,
ຢ່າງທີ່ເຄີຍມີສຳລັບຄົນອິດສະຣາເອນໃນຕອນທີ່ພວກເຂົາຂຶ້ນມາຈາກແຜ່ນດິນເອຢິບ.


generated on Tue Jun 17 19:01:42 2025

12 [1]ໃນວັນນັ້ນ ເຈົ້າຈະກ່າວວ່າ "ຂ້າແດ່ພຣະຢາເວ ຂ້ານ້ອຍຈະຂອບພຣະຄຸນພຣະອົງ ເພາະເຖິງແມ້ວ່າພຣະອົງຈະໃຈຮ້າຍຕໍ່ຂ້ານ້ອຍ
ແຕ່ຄວາມໂກດຮ້າຍຂອງພຣະອົງກໍໄດ້ຫັນກັບໄປແລ້ວ ແລະ ພຣະອົງໄດ້ຫັນໄປແລ້ວ
ແລະພຣະອົງໄດ້ຊົງປອບໂຍນຂ້ານ້ອຍ[2]ເບິ່ງເຖີດພຣະເຈົ້າຊົງເປັນຄວາມຮອດຂອງຂ້ານ້ອຍ, ຂ້ານ້ອຍຈະວາງໃຈ ແລະ ບໍ່ຢ້ານເລີຍ
ເພາະພຣະຢາເວແມ່ນແລ້ວພຣະຢາເວຊົງເປັນກຳລັງແລະບົດເພງຂອງຂ້ານ້ອຍພຣະອົງຊົງເປັນຄວາມຮອດຂອງຂ້ານ້ອຍແລ້ວ"

[3]ເຈົ້າຈະຕັກນ້ຳຈາກບໍ່ນ້ຳແຫ່ງຄວາມລອດພົ້ນດ້ວຍຄວາມຊື່ນບານ[4]ໃນວັນນັ້ນ ເຈົ້າຈະເວົ້າວ່າ
"ຈົ່ງຂອບພຣະຄຸນແດ່ພຣະຢາເວແລະຮ້ອງຫາພຣະນາມຂອງພຣະອົງຈົ່ງປະກາດບັນດາວຽກງານທ່າມກາງຊົນຊາດທັງຫລາຍຈົ່ງປ່າວຮ້ອງວ່າພຣະນາມຂອງພຣະອົ
[5]ຈົ່ງຮ້ອງເພງແດ່ພຣະຢາເວ, ເພາະພຣະອົງໄດ້ຊົງກະທຳວຽກທີ່ໜ້າສັນລະເສີນ; ຈົ່ງໃຫ້ເລື່ອງນີ້ເປັນທີ່ຮູ້ກັນທົ່ວແຜ່ນດິນໂລກ.[6]ຊາວຊີໂອນເອີຍ,
ຈົ່ງຮ້ອງສຽງດັງ ແລະ ໂຫ່ຮ້ອງດ້ວຍຄວາມຍິນດີ ເພາະອົງບໍຣິສຸດຂອງອິດສະຣາເອນຜູ້ຊົງຍິ່ງໃຫຍ່ຢູ່ທ່າມກາງພວກເຈົ້າ."

# 13

[1]ຄຳປະກາດກ່ຽວກັບບາບີໂລນຕາມທີ່ອິດສາລູກຊາຍຂອງອາມອນໄດ້ຮັບຄື[2]ຈົ່ງງຕັ້ງທຸງສັນຍານຂຶ້ນເທິງພູເຂົາຫົວໂລ້ນ
ຈົ່ງງຮ້ອງສຽງດັງຕໍ່ພວກເຂົາຈົ່ງໂບກມືຂອງເຈົ້າຮ້ອງຫາພວກເນຂົາເຂົ້າໄປໃນປະຕູເມືອງຂອງບັນດາເຈົ້ານາຍ[3]ເຮົາໄດ້ບັນຊາພວກຄົນທີ່ບໍລິສຸດຂອງເຮົາແມ່ນແລ້ວເຮົ

[4]ສຽງຂອງມວນຊົນໃນພູເຂົາເຫລົ່ານັ້ນ, ເຫມືອນສຽງຂອງຄົນຫລວງຫລາຍ!
ສຽງອຶກກະທຶກຂອງບັນດາຣາຊອານາຈັກເປັນເຫມືອນກັບຊົນຊາດຫລວງຫລາຍທີ່ຮວມຕົວເຂົ້າດ້ວຍກັນ! ພຣະຢາເວຈອມໂຢທາກຳລັງ
ລະດົມກອງທັບເພື່ອເຮັດສົງຄາມ.[5]ພວກເຂົາມາຈາກປະເທດທີ່ຫ່າງໄກ, ມາຈາກສຸດຂອບຟ້າ.
ນີ້ເປັນການທີ່ພຣະຢາເວຈະທຳລາຍທົ່ວທັງແຜ່ນດິນດ້ວຍເຄື່ອງມືແຫ່ງການພິພາກສາ.
[6]ຮ້ອງຄວນຄາງດ້ວຍຄວາມເຈັບປວດ, ເພາະວັນແຫ່ງພຣະຢາເວໃກ້ເຂົ້າມາແລ້ວ; ວັນນັ້ນຈະມາດ້ວຍການທຳລາຍຈາກອົງຜູ້ຊົງຣິດອຳນາດ.
[7]ເພາະສະນັ້ນ ມືທຸກມືຈະອ່ອນແຮງ, ແລະ ໃຈຂອງທຸກຄົນຈະສະລາຍລົງ.[8]ພວກເຂົາຈະຕົກໃຈຢ້ານ; ຄວາມເຈັບປວດ ແລະ
ຄວາມທຸກທໍລະມານຈະຍຶດກຸມພວກເຂົາໄວ້, ເຫມືອນກັບຜູ້ຍິງກຳລັງເກີດລູກພວກເຂົາຈະເບິ່ງກັນ ແລະກັນດ້ວຍຄວາມປະຫລາດໃຈ;
ໃບຫນ້າຂອງພວກເຂົາຈະເຫມືອນກັບແສງໄຟ.
[9]ເບິ່ງເຖີດ, ວັນແຫ່ງພຣະຢາເວຈະມາດ້ວຍຄວາມໂກດຮ້າຍແຮງ ແລະ ຄວາມໃຈຮ້າຍຢ່າງຖ້ວມລົ້ນ, ເພື່ອທີ່ຈະເຮັດໃຫ້ແຜ່ນດິນເປັນທີ່ຮ້າງເປົ່າ
ແລະ ເພື່ອທຳລາຍພວກຄົນບາບຈາກແຜ່ນດິນນັ້ນ.[10]ເຫລົ່າດວງດາວເທິງທ້ອງຟ້າ ແລະ ກຸ່ມດາວຕ່າງໆ ຈະບໍ່ຊ່ອງແສງ.
ດວງອາທິດຈະມືດໄປຕັ້ງແຕ່ຕອນຮຸ່ງເຊົ້າ, ແລະດວງຈັນຈະບໍ່ຊ່ອງແສງ.
[11]ເຮົາຈະລົງໂທດໂລກນີ້ຕໍ່ຄວາມຊົ່ວຮ້າຍແລະ ການອະທຳຂອງໂລກນີ້ ແລະ ຕໍ່ຄວາມຊົ່ວຊ້າຂອງພວກເຂົາ.
ເຮົາຈະເຮັດໃຫ້ຄວາມເຢີຍິ່ງຂອງຄົນຈອງຫອງສິ້ນສຸດລົງ ແລະ ຈະເຮັດໃຫ້ຄວາມຍິ່ງຍະໂສຂອງຄົນທີ່ໂຫດຮ້າຍຕົກຕ່ຳລົງ.
[12]ເຮົາຈະເຮັດໃຫ້ພວກຜູ້ຊາຍຫາຍາກຍິ່ງກວ່າຫາທອງຄຳ ແລະ ມະນຸດກໍຈະຫາຍາກກວ່າທອງຄຳບໍລິສຸດແຫ່ງໂອຟີ.
[13]ເພາະສະນັ້ນ ເຮົາຈະເຮັດໃຫ້ທ້ອງຟ້າສັ່ນສະເທືອນ, ແລະ ແຜ່ນດິນໂລກສັ່ນສະເທືອນອອກຈາກທີ່ຂອງມັນ,
ໂດຍຄວາມໂກດຮ້າຍຮຸນແຮງຂອງພຣະຢາເວຈອມໂຢທາ, ແລະ ໃນວັນແຫ່ງຄວາມໂກດຮ້າຍອັນຮຸນແຮງຂອງພຣະອົງ.
[14]ເຫມືອນກັບລະມັ່ງທີ່ຖືກລ່າ ຫລືເຫມືອນກັບແກະທີ່ບໍ່ມີຜູ້ລ້ຽງ, ທຸກຄົນຈະຫັນກັບໄປຍັງຊົນຊາດຂອງຕົນເອງ ແລະ
ທຸກຄົນຈະຫນີໄປຍັງແຜ່ນດິນຂອງຕົນເອງ.
[15]ທຸກຄົນທີ່ຖືກພົບຈະຖືກຂ້າ, ແລະ ທຸກຄົນທີ່ຖືກຈັບໄດ້ກໍຈະຕາຍດ້ວຍດາບ.[16]ພວກເດັກເກີດໃຫມ່ຂອງພວກເຂົາຈະຖືກຟາດລົງເປັນຕ່ອນໆ
ຕໍ່ຫນ້າຕໍ່ຕາພວກເຂົາ. ບ້ານເຮືອນຂອງພວກເຂົາຈະຖືກປຸ້ນ ແລະ ເມຍຂອງພວກເຂົາຈະຖືກຂົ່ມຂືນ.
[17]ເບິ່ງເຖີດ, ເຮົາກຳລັງເລັ່ງໃຫ້ຄົນມີເດຍມາໂຈມຕີພວກເຂົາ, ຜູ້ທີ່ບໍ່ສົນໃຈເລື່ອງເງິນ, ແລະພວກເຂົາບໍ່ຍິນດີໃນທອງຄຳ.
[18]ລູກທະນູຂອງພວກເຂົາຈະປັກລົງທີ່ພວກຄົນຫນຸ່ມ. ພວກເຂົາຈະບໍ່ມີຄວາມສົງສານຕໍ່ພວກເດັກແລກເກີດ ແລະ ຈະບໍ່ໄວ້ຊີວິດພວກເດັກນ້ອຍ.
[19]ແລ້ວບາບີໂລນ, ຊຶ່ງເປັນທີ່ຍົກຍ້ອງທີ່ສຸດໃນບັນດາຣາຊອານາຈັກທັງຫລາຍ, ຄວາມງົດງາມທີ່ຄົນເຄນເດຍພາກພູມໃຈ,
ພຣະເຈົ້າຈະຊົງທຳລາຍເຫມືອນກັບເມືອງໂຊໂດມ ກັບເມືອງໂກໂມຣາ.[20]ຈະບໍ່ມີຜູ້ໃດເຂົ້າໄປອາໃສ
ຫລືອາໃສຢູ່ໃນເມືອງນັ້ນຕະຫລອດທຸກຊົ່ວອາຍຸຄົນ. ຄົນອາຣັບຈະບໍ່ກາງເຕັນຂອງເຂົາທີ່ນັ້ນ, ແລະ ຜູ້ລ້ຽງແກະຈະບໍ່ໃຫ້ຝູງສັດພັກຢູ່ທີ່ນັ້ນ.
[21]ແຕ່ພວກສັດປ່າແຫ່ງທະເລຊາຍຈະນອນລົງທີ່ນັ້ນ. ບ້ານເຮືອນຂອງພວກເຂົາຈະເຕັມໄປດ້ວຍເຈຍ; ແລະ ນົກກະຈອກເທດ ແລະ
ແບ້ປ່າຈະກະໂດດໂລດເຕັ້ນຢູ່ທີ່ນັ້ນ.[22]ຫມາຈິ້ງຈອກຈະເຫົ່າຫອນຢູ່ໃນບັນດາເມືອງປ້ອມຂອງພວກເຂົາ, ແລະ ຫມາປ່າຈະຢູ່ໃນວັງທີ່ສວຍງາມ
ເວລາຂອງເມືອງນັ້ນກໍໃກ້ເຂົ້າມາແລ້ວ, ແລະ ວັນຂອງເມືອງນັ້ນຈະບໍ່ລ່າຊ້າອີກຕໍ່ໄປ.

 generated on Tue Jun 17 19:01:42 2025

14 [1]ພຣະຢາເວຈະຊົງເມດຕາຕໍ່ຢາໂຄບ; ພຣະອົງຈະຊົງເລືອກອິດສະຣາເອນອີກ ແລະເຮັດໃຫ້ພວກເຂົາກັບຄືນສູ່ແຜ່ນດິນຂອງພວກເຂົາເອງ.
ພວກຄົນຕ່າງຊາດຈະສົມທົບກັບພວກເຂົາ ແລະ ພົວພັນຕົວພວກເຂົາເອງກັບເຊື້ອສາຍຂອງຢາໂຄບ.
[2]ຊົນຊາດທັງຫລາຍຈະນຳພວກເຂົາມາຍັງທີ່ຂອງພວກເຂົາເອງ ແລ້ວເຊື້ອສາຍຂອງອິດສະຣາເອນຈະຮັບພວກເຂົາມາເປັນຄົນຮັບໃຊ້ຊາຍ ແລະ
ຍິງໃນແຜ່ນດິນຂອງພຣະຢາເວ. ພວກເຂົາຈະຈັບຄົນເຫລົ່ານັ້ນເປັນຊະເລີຍ, ຄືພວກທີ່ໄດ້ເຄີຍຈັບພວກເຂົາເປັນຊະເລີຍ, ແລະ
ພວກເຂົາຈະປົກຄອງເຫນືອພວກຄົນທີ່ເຄີຍບີບບັງຄັບພວກເຂົາ.

[3]ໃນວັນທີ່ພຣະຢາເວປຣະທານໃຫ້ພວກເຈົ້າໄດ້ຢຸດພັກຈາກຄວາມທຸກ ແລະ ຈາກຄວາມເຈັບປວດ, ແລະ
ຈາກງານຍາກກາກກຳທີ່ພວກເຈົ້າຖືກບີບບັງຄັບໃຫ້ເຮັດ,[4]ພວກເຈົ້າຈະຮ້ອງບົດເພງເຍາະເຍີ້ຕໍ່ກະສັດຂອງບາບີໂລນວ່າ,
"ຜູ້ທີ່ບີບບັງຄັບໄດ້ມາເຖິງຈຸດຈົບໄດ້ຢ່າງໃດນໍ, ຄວາມໂຫດຮ້າຍທີ່ຫຍ້າຍິ່ງໄດ້ສິ້ນສຸດລົງແລ້ວ!
[5]ພຣະຢາເວໄດ້ຊົງຫັກໄມ້ປະລອງຂອງຄົນອະທຳ, ແລະຊົງຫັກໄມ້ຄ້ອນເທົ້າຂອງຜູ້ປົກຄອງເຫລົ່ານັ້ນ,
[6]ທີ່ໄດ້ຕີຊົນຊາດທັງຫລາຍດ້ວຍຄວາມໂຫດຮ້າຍດ້ວຍການທຸບຕີແບບບໍ່ຢຸດຢັ້ງ, ຜູ້ທີ່ໄດ້ປົກຄອງຊົນຊາດທັງຫລາຍດ້ວຍຄວາມໃຈຮ້າຍ,
ດ້ວຍການຕີແບບບໍ່ຢັ້ງມື.
[7]ທົ່ວທັງໂລກກໍຢຸດພັກ ແລະ ງຽບສະງົບຢູ່ ພວກເຂົາເລີ່ມການສະຫລອງດ້ວຍການຮ້ອງເພງ.[8]ແມ່ນແຕ່ຕົ້ນສົນສາມໃບກໍຊື່ນຊົມຍິນດີເຫນືອເຈົ້າ
ກັບບັນດາຕົ້ນສົນສີດາແຫ່ງເລບານອນ; ພວກມັນກ່າວວ່າ, 'ຕັ້ງແຕ່ເຈົ້າໄດ້ຖືກເຮັດໃຫ້ຕົກຕ່ຳລົງ ກໍບໍ່ມີຄົນຕັດໄມ້
ຂຶ້ນໄປຕັດພວກເຮົາລົງມາເລີຍ.'[9]ແດນຄົນຕາຍຢູ່ເບື້ອງລຸ່ມກໍຕື່ນເຕັ້ນທີ່ຈະພົບກັບເຈົ້າເມື່ອເຈົ້າໄປທີ່ນັ້ນ. ມັນປຸກຄົນຕາຍໃຫ້ມາຮັບເຈົ້າ
ຄືກະສັດທັງປວງຂອງແຜ່ນດິນໂລກ, ຊຶ່ງເຮັດໃຫ້ກະສັດທັງປວງຂອງຊົນຊາດທັງຫລາຍລຸກຂຶ້ນຈາກບັນລັງຂອງພວກເຂົາ.
[10]ພວກເຂົາຈະເວົ້າ ແລະ ກ່າວກັບເຈົ້າວ່າ, 'ເຈົ້າໄດ້ກາຍເປັນຄົນອ່ອນແອເຫມືອນກັບພວກເຮົາ. ເຈົ້າໄດ້ກາຍເປັນເຫມືອນກັບເຮົາ.
[11]ຄວາມສະງ່າງາມຂອງເຈົ້າໄດ້ຖືກນຳລົງໄປສູ່ແດນຄົນຕາຍ ດ້ວຍສຽງດົນຕີເຄື່ອງສາຍຂອງເຈົ້າ. ພວກໂຕດັກແດ້ຈະແຜ່ຂະຫຍາຍຢູ່ໃຕ້ຕົວເຈົ້າ,
ແລະ ພວກໂຕຫນອນຈະປົກຄຸມເຈົ້າ.'
[12]ເຈົ້າຕົກລົງມາຈາກຟ້າສະຫວັນໄດ້ຈັ່ງໃດນໍ, ດາວປະຈຳຮຸ່ງ, ລູກຊາຍແຫ່ງຮຸ່ງອາລຸນ! ເຈົ້າຖືກໂຄ່ນລົງມາສູ່ພື້ນດິນແລ້ວນໍ,
ເຈົ້າຜູ້ພິຊິດຊົນຊາດທັງຫລາຍ![13]ເຈົ້າໄດ້ຄິດໃນໃຈຂອງເຈົ້າວ່າ, 'ເຮົາຈະຂຶ້ນໄປຍັງຟ້າສະຫວັນ,
ເຮົາຈະຕັ້ງບັນລັງຂອງເຮົາເຫນືອດວງດາວທັງຫລາຍຂອງພຣະເຈົ້າ, ແລະ ເຮົາຈະນັ່ງເທິງພູເຂົາແຫ່ງການຊຸມນຸມກັນ,
ໃນທີ່ສຸດປາຍໄກທາງທິດເຫນືອນັ້ນ.[14]ເຮົາຈະຂຶ້ນໄປເຫນືອຄວາມສູງຂອງເມກ;
ເຮົາຈະເຮັດໃຫ້ຕົວຂອງເຮົາເອງເປັນເຫມືອນອົງພຣະເຈົ້າສູງສຸດ.'
[15]ແຕ່ຕອນນີ້ເຈົ້າໄດ້ຖືກນຳລົງໄປສູ່ແດນຄົນຕາຍ, ໄປຍັງຂຸມເລິກທີ່ສຸດ.[16]ຄົນເຫລົ່ານັ້ນທີ່ເຫັນເຈົ້າຈະຈ້ອງເບິ່ງທີ່ເຈົ້າ
ແລະພວກເຂົາຈະໃຫ້ຄວາມສົນໃນຕົວເຈົ້າ. ພວກເຂົາຈະກ່າວວ່າ. 'ຊາຍຄົນນີ້ຫລືທີ່ເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນ,
ຜູ້ທີ່ໂຄ່ຈ້າຣາຊອານາຈັກທັງຫລາຍ,[17]ຜູ້ທີ່ເຮັດໃຫ້ໂລກນີ້ເຫມືອນກັບຖິ່ນແຫ້ງແລ້ງກັນດານດ ຜູ້ທີ່ທຳລາຍເມືອງຕ່າງໆ ແລະ
ບໍ່ຍອມປ່ອຍໃຫ້ຊະເລີຍຂອງເຂົາກັບບ້ານ?'
[18]ກະສັດທັງປວງຂອງຊົນຊາດທັງຫລາຍ, ພວກເຂົາທຸກຄົນຕ່າງນອນລົງຢ່າງມີກຽດ, ຕ່າງກໍຢູ່ໃນອຸບໂມງຝັງສົບຂອງຕົນເອງ.
[19]ແຕ່ເຈົ້າຖືກໂຍນອອກໄປຈາກຫລຸມຝັງສົບຂອງເຈົ້າເຫມືອນກັບກິ່ງໄມ້ທີ່ຖືກໂຍນອອກໄປ. ພວກຄົນຕາຍກໍປົກຄຸມເຈົ້າເຫມືອນກັບເສື້ອຄຸມ,
ຄືຄົນເຫລົ່ານັ້ນທີ່ຖືກແທງດ້ວຍດາບ, ຄົນທີ່ລົງໄປຍັງຫີນແຫ່ງຂຸມນະລົກ.[20]ເຈົ້າຈະບໍ່ມີສ່ວນຮ່ວມໃນງານຝັງສົບກັບພວກເຂົາ,
ເພາະເຈົ້າໄດ້ທຳລາຍແຜ່ນດິນຂອງເຈົ້າ ແລະ ໄດ້ຂ້າຊົນຊາດຂອງເຈົ້າ. ລູກຫລານຂອງຄົນເຮັດຊົ່ວຈະບໍ່ມີໃຜກ່າວເຖິງອີກເລີຍ."
[21]ຈົ່ງຕຽມການສັງຫານລູກໆ ຂອງເຂົາເພາະຄວາມຊົ່ວຮ້າຍຂອງເຊື້ອສາຍຂອງພວກເຂົາ, ດ້ວຍເຫດນີ້ ຢ່າໃຫ້ພວກເຂົາລຸກຂຶ້ນມາ
ແລະຄອບຄອງແຜ່ນດິນໂລກ ແລະ ເຮັດໃຫ້ທົ່ວທັງໂລກນີ້ເຕັມໄປດ້ວຍເມືອງຕ່າງໆ.[22]ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ,
"ເຮົາຈະລຸກຂຶ້ນສູ້ກັບພວກເຂົາ, ເຮົາຈະຕັດຊື່ເຊື້ອສາຍ ແລະ ລູກຫລານອອກໄປຈາກບາບີໂລນ" ນີ້ຄືຄຳປະກາດຂອງພຣະຢາເວ.
[23]"ເຮົາຈະເຮັດໃຫ້ເມືອງນັ້ນຖືກຍຶດຄອງດ້ວຍພວກນົກເຄົ້າ, ແລະເຮັດໃຫ້ເປັນສະນ້ຳ, ແລະ
ເຮົາຈະກວາດເມືອງນັ້ນດ້ວຍໄມ້ກວາດແຫ່ງການທຳລາຍ" - ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ.
[24]ພຣະຢາເວຈອມໂຍທາໄດ້ຊົງປະຕິຍານວ່າ, "ເຮົາໄດ້ວາງແຜນໄວ້ຢ່າງໃດ, ມັນກໍຈະເກີດຂຶ້ນຢ່າງນັ້ນ; ແລະ ເຮົາໄດ້ມຸ່ງຫມາຍໄວ້ຢ່າງໃດ
ມັນກໍຈະເປັນເຊັ່ນນັ້ນ:[25]ເຮົາຈະຕີຄົນອັດຊີເຣຍໃຫ້ແຕກໃນມືຂອງເຮົາ, ແລະ ຈະຢຽບຢ້ຳເຂົາໃຫ້ຢູ່ໃຕ້ຝ່າຕີນເທິງພູເຂົາທັງຫລາຍຂອງເຮົາ.
ແລ້ວແອກຂອງເຂົາຈະຖືກຍົກອອກໄປຈາກພວກເຂົາແລະ ພາລະຫນັກຂອງເຂົາອອກໄປຈາກບ່າຂອງພວກເຂົາ."
[26]ນີ້ເປັນແຜນງານທີ່ໄດ້ວາງໄວ້ແລ້ວຕໍ່ແຜ່ນດິນໂລກທັງຫມົດ, ແລະ ນີ້ເປັນມືທີ່ຍົກຂຶ້ນເຫນືອຊົນຊາດທັງຫລາຍ.
[27]ເພາະພຣະຢາເວຈອມໂຢທາໄດ້ຊົງວາງແຜນນີ້ໄວ້; ໃຜຈະຢຸດຢັ້ງພຣະອົງໄດ້? ມືຂອງພຣະອົງໄດ້ຍົກຂຶ້ນແລ້ວ,
ແລະໃຜຈະເຮັດໃຫ້ມືນັ້ນກັບມາໄດ້?
[28]ໃນປີທີ່ກະສັດອາຮາດໄດ້ຕາຍ ຄຳປະກາດນີ້ໄດ້ມາເຖິງວ່າ:[29]ຄົນຟີລິດສະຕິນເອີຍ ພວກເຈົ້າທັງຫມົດ,
ຢ່າປິຕິຍິນດີທີ່ໄມ້ຄ້ອນທີ່ໄດ້ຕີພວກເຈົ້າຫັກລົງແລ້ວ. ເພາະງູໂຕຫນຶ່ງຈະເຕີບໃຫຍ່ມາຈາກຮາກເຫງົ້າຂອງງູພິດ, ແລະ
ເຊື້ອສາຍຂອງເຂົາຈະເປັນໂຕມັງກອນ.[30]ລູກຫົວປີຂອງຄົນທຸກຈົນຈະລ້ຽງຝູງແກະຂອງພວກເຂົາໃນທົ່ງຫຍ້າຂອງເຮົາ, ແລະ
ຄົນຂັດສົນຈະນອນລົງຢ່າງປອດໄພ. ເຮົາຈະເຮັດໃຫ້ຮາກເຫງົ້າຂອງພວກເຈົ້າຕາຍດ້ວຍການແຫ້ງແລ້ງກັນດານອາຫານ
ທີ່ຈະສັງຫານຄົນທີ່ລອດຊີວິດທັງຫມົດຂອງພວກເຈົ້າ.
[31]ປະຕູເມືອງເອີຍ, ຈົ່ງຄວນຄາງ, ເມືອງເອີຍ ຈົ່ງຮ້ອງໄຫ້, ຟີລິດສະຕິນເອີຍ. ພວກເຈົ້າ ທຸກຄົນຈະລະລາຍໄປ
ສະເພາະເມກຄວັນອອກມາຈາກທາງເຫນືອ ແລະ ບໍ່ມີໃຜທີ່ແຕກອອກຈາກແຖວຂອງຕົນເລີຍ.
[32]ແລ້ວຄົນຈະຕອບພວກຄົນສື່ສານຂອງຊົນຊາດນັ້ນວ່າຢ່າງໃດ? ກໍວ່າ ພຣະຢາເວໄດ້ວາງຖານຮາກຊີໂອນໄວ້,
ແລະຄົນທີ່ທົນທຸກຂອງຊົນຊາດຂອງພຣະອົງຈະພົບທີ່ລີ້ໄພໃນທີ່ນັ້ນ.


generated on Tue Jun 17 19:01:42 2025

15 [1]ຄຳປະກາດກ່ຽວກັບໂມອາບ. ເມືອງອາຣະຂອງໂມອາບຖືກເຮັດໃຫ້ຫວ່າງເປົ່າ ແລະ ຖືກທຳລາຍ; ໃນຄືນດຽວຢ່າງແນ່ນອນ,
ເມືອງກີຣະຂອງໂມອາບຖືກເຮັດໃຫ້ຫວ່າງເປົ່າ ແລະຖືກທຳລາຍໃນຄືນດຽວຢ່າງແນ່ນອນ.[2]ພວກເຂົາໄດ້ຂຶ້ນໄປຍັງພຣະວິຫານ,
ຄົນດີໂບນໄດ້ຂຶ້ນໄປຍັງທີ່ສູງເພື່ອຮ້ອງໄຫ້; ໂມອາບຄຳຄວນເຖິງເມືອງເນໂບ ແລະ ເມືອງເມເດບາ.
ຫົວຂອງພວກເຂົາທຸກຄົນກໍຖືກໂກນອອກຈົນໂລ້ນ ແລະ ຫນວດຂອງພວກເຂົາທຸກຄົນກໍຖືກຕັດອອກ.

[3]ພວກເຂົາສວມໃສ່ຜ້າກະສອບຢູ່ຕາມຫົນທາງທຸກຄົນຄຳຄວນນ້ຳຕານອງ ທັງເທິງຫລັງຄາບ້ານຂອງພວກເຂົາ ແລະ ໃນລານເມືອງ.
[4]ເມືອງເຮດໂບນ ແລະ ເມືອງເອເລອາເລ ຮ້ອງຫາຂໍຄວາມຊ່ວຍເຫລືອ; ສຽງຂອງພວກເຂົາໄດ້ຍິນໄປໄກເຖິງເມືອງຢາຮາດ. ດັ່ງນັ້ນ
ພວກຜູ້ຊາຍທີ່ຖືອາວຸດຂອງໂມອາບກໍຮ້ອງຫາຂໍຄວາມຊ່ວຍເຫລືອ; ພວກເຂົາສັ່ນສະທ້ານຢູ່ພາຍໃນຕົວເອງ.
[5]ຫົວໃຈຂອງຂ້ານ້ອຍຮ້ອງໄຫ້ອອກມາເພື່ອໂມອາບ; ພວກຜູ້ລີ້ໄພຂອງເມືອງນັ້ນໄດ້ຫນີໄປຍັງເມືອງໂຊອາ ແລະ ໄປຍັງເມືອງເອັກລາດ
ເຊລິດຊີຢາ. ພວກເຂົາຂຶ້ນໄປຕາມທາງທີ່ຂຶ້ນໄປຍັງເມືອງລູຫິດ ຮ້ອງໄຫ້ຄຳຄວນ.
ພວກເຂົາຮ້ອງຄຳຄວນສຽງດັງເຖິງການຖືກທຳລາຍຕາມຫົນທາງທີ່ໄປຍັງໂຮໂຣນາອິມ.[6]ບັນດາລຳນ້ຳແຫ່ງນິມຣິມໄດ້ແຫ້ງໄປ; ຫຍ້າກໍຫ່ຽວແຫ້ງ
ແລະ ຫຍ້າທີ່ຂຶ້ນໃຫມ່ກໍຕາຍ; ບໍ່ມີພືດຂຽວສົດອີກແລ້ວ.[7]ຄວາມອຸດົມສົມບູນ ທີ່ພວກເຂົາໄດ້ປູກ ແລະ ເກັບສະສົມໄວ້
ພວກເຂົາໄດ້ຂົນຂ້າມລຳທານແຫ່ງຕົ້ນຫລິວໄປ.
[8]ການຮ້ອງໄຫ້ໄດ້ກະຈາຍໄປທົ່ວເຂດແດນຂອງໂມອາບ; ການຄຳຄວນທີ່ໄກໄປເຖິງເມືອງເອັກລາອິມ ແລະ ເມືອງເບເອເຣລິມ.
[9]ເພາະບັນດາລຳນ້ຳຂອງເມືອງດີໂມນເຕັມດ້ວຍເລືອດ; ແຕ່ເຮົາຈະເພີ່ມໄພໃຫ້ກັບເມືອງດີໂມນຫລາຍກວ່ານີ້.
ສິງໂຕຈະທຳຮ້າຍພວກຄົນທີ່ຫນີຮອດໄປຈາກໂມອາບ ແລະ ພວກຄົນທີ່ຍັງຄົງເຫລືອຢູ່ໃນແຜ່ນດິນນັ້ນດ້ວຍ.

 generated on Tue Jun 17 19:01:42 2025

16 [1]ຈົ່ງສົ່ງພວກແກະໂຕຜູ້ໄປຍັງຜູ້ປົກຄອງແຜ່ນດິນຈາກເມືອງເສລາໃນຖິ່ນແຫ້ງແລ້ງກັນດານ, ໄປຍັງພູເຂົາຂອງລູກສາວແຫ່ງຊີໂອນ.
[2]ພວກນົກທີ່ຖືກໄລ່ ເຮັດໃຫ້ກະແຈກກະຈາຍໄປ, ພວກຜູ້ຍິງຂອງໂມອາບທີ່ຢູ່ທີ່ທ່ານ້ຳຂອງແມ່ນ້ຳອາກໂນນກໍເປັນຢ່າງນັ້ນ.

[3]"ຈົ່ງໃຫ້ຄຳແນະນຳ, ຈົ່ງເຮັດການຖ້າຢ່າງເປັນທຳ; ຈົ່ງໃຫ້ຮົ່ມເງົາເຫມືອນກາງຄືນໃນເວລາທ່ຽງວັນ; ຈົ່ງເຊື່ອງພວກຜູ້ລີ້ໄພ;
ຢ່າຫັກຫລັງພວກຜູ້ລີ້ໄພ.[4]ຈົ່ງໃຫ້ພວກລີ້ໄພຈາກໂມອາບ, ອາໃສຢູ່ທ່າມກາງພວກເຈົ້າເປັນທີ່ເຊື່ອງໃຫ້ກັບພວກເຂົາໃຫ້ພົ້ນຈາກຜູ້ທຳລາຍ."
ເພາະການບີບບັງຄັບຈະຢຸດໄປ, ແລະ ການທຳລາຍຈະຫມົດສິ້ນໄປ, ພວກຄົນທີ່ຢຽບຢ້ຳຈະຫາຍໄປຈາກແຜ່ນດິນນັ້ນ.
[5]ບັນລັງຈະຖືກສະຖາປະນາໃນພັນທະສັນຍາອັນສັດຊື່; ແລະ ຄົນຫນຶ່ງຈາກເຕັນຂອງດາວິດຈະປະທັບຢ່າງສັດຊື່ທີ່ນັ້ນ.
ພຣະອົງຈະພິພາກສາຢ່າງທີ່ ພຣະອົງສະແຫວງຫາຄວາມຍຸດຕິທຳ ແລະ ເຮັດຢ່າງຊອບທຳ.
[6]ພວກເຮົາໄດ້ຍິນເຖິງຄວາມທະນົງຕົວຂອງໂມອາບ, ຄວາມຈອງຫອງ, ການໂອ້ອວດ, ແລະ ຄວາມໃຈຮ້າຍຂອງເຂົາ.
ແຕ່ການໂອ້ອວດຂອງເຂົາເປັນຖ້ອຍຄຳທີ່ໄຮ້ປະໂຫຍດ.[7]ດັ່ງນັ້ນໂມອາບຈຶ່ງຄຳຄວນເຖິງໂມອາບ - ພວກເຂົາທຸກຄົນຄຳຄວນ! ຮ້ອງໄຫ້,
ເຖິງຂະຫນົມເຄັກຫມາກລະແຊງ ຂອງເມືອງກີເຣ-ຮາເຣເສັດ ພວກເຈົ້າຜູ້ທີ່ຖືກທຳລາຍຈົນສິ້ນຊາກ.
[8]ທົ່ງນາຂອງເມືອງເຮັດຊະໂບນກໍຫ່ຽວແຫ້ງເຊັ່ນດຽວກັບສວນອະງຸ່ນຂອງເມືອງສິບມາ.
ພວກຜູ້ປົກຄອງຊົນຊາດທັງຫລາຍໄດ້ຢຽບຢ້ຳສວນອະງຸ່ນທີ່ຄັດເລືອກໄວ້ທີ່ແຜ່ໄປເຖິງເມືອງຢາເຊ ແລະ ແຜ່ກະຈາຍໄປຍັງທະເລຊາຍ.
ຫນໍ່ຂອງມັນກໍຂະຫຍາຍອອກໄປຢ່າງກວ້າງຂວາງ; ພວກມັນໄດ້ຂ້າມທະເລໄປ.
[9]ຂ້າພະເຈົ້າຈະຮ້ອງໄຫ້ຄຳຄວນພ້ອມກັບເມືອງຢາເຊ ເຖິງສວນອະງຸ່ນຂອງສິບມາ ຢ່າງແນ່ນອນ. ຂ້າພະເຈົ້າຈະຫົດນ້ຳເມືອງເຮັດຊະໂບນ, ແລະ
ເມືອງເອເລອາເລ ດ້ວຍນ້ຳຕາຂອງຂ້າພະເຈົ້າ. ເພາະຂ້າພະເຈົ້າໄດ້ຢຸດໂຫ່ຮ້ອງດ້ວຍຄວາມຍິນດີ ໃຫ້ກັບສວນຜົນລະໄມ້ລະດູຮ້ອນຂອງທ່ານ
ແລະ ການເກັບກ່ຽວ.[10]ຄວາມຍິນດີ ແລະ ຄວາມຊື່ນບານໄດ້ຖືກເອົາໄປຈາກສວນຜົນລະໄມ້; ແລະ ບໍ່ມີການຮ້ອງເພງ,
ຫລືໂຫ່ຮ້ອງໃນສວນຫມາກອະງຸ່ນ. ບໍ່ມີໃຜບີບໃຫ້ເຫລົ້າອະງຸ່ນອອກໃນບໍ່ບີບອະງຸ່ນ, ເພາະຂ້າພະເຈົ້າໄດ້ຢຸດໂຫ່ຮ້ອງເຖິງຄົນທີ່ບີບອະງຸ່ນ.
[11]ດັ່ງນັ້ນຈິດໃຈຂອງຂ້າພະເຈົ້າໄດ້ຮ້ອງໄຫ້ເຫມືອນພິນເຖິງໂມອາບ, ແລະ ພາຍໃນຂ້າພະເຈົ້າໄດ້ຮ້ອງໃຫ້ເຖິງກີຣະເຮເຣັດ.
[12]ເມື່ອໂມອາບເອງໄດ້ເມື່ອຍລ້າຢ່າງທີ່ສຸດຢູ່ທີ່ສະຖານສູງ ແລະເຂົ້າໄປຍັງວິຫານຂອງເຂົາເພື່ອອະທິຖານ,
ຄຳອະທິຖານຂອງເຂົາຈະບໍ່ເກີດຜົນແຕ່ຢ່າງໃດ.
[13]ນີ້ເປັນຖ້ອຍຄຳທີ່ພຣະຢາເວໄດ້ກ່າວກ່ຽວກັບໂມອາບມາກ່ອນຫນ້ານີ້.[14]ພຣະຢາເວກ່າວອີກວ່າ, "ພາຍໃນສາມປີ,
ຄວາມຮັ່ງມີອັນມະຫາສານຂອງໂມອາບຈະສູນສິ້ນໄປ; ແມ້ວ່າຈະມີປະຊາຊົນຫລວງຫລາຍ, ຄົນທີ່ເຫລືອຢູ່ນັ້ນຈະຫນ້ອຍຫລາຍ ແລະ
ບໍ່ມີຄວາມສຳຄັນ."


generated on Tue Jun 17 19:01:42 2025

# 17

[1]ຄຳປະກາດກ່ຽວກັບເມືອງດາມັສກັດ.[2]ບັນດາເມືອງຂອງອາໂຣເອີນຈະຖືກເຮັດໃຫ້ຮົກຮ້າງ. ເມືອງເຫລົ່ານັ້ນຈະເປັນທີ່ສຳລັບຝູງແກະນອນ,
ແລະ ບໍ່ມີໃຜຈະເຮັດໃຫ້ພວກມັນຕົກໃຈຢ້ານໄດ້.[3]ບັນດາເມືອງປ້ອມປາການຈະຫາຍໄປຈາກເອຟາຣິມ,
ຣາຊອານາຈັກຈະຫາຍໄປຈາກເມືອງດາມັສກັດ, ແລະ ຄົນທີ່ເຫລືອຢູ່ຂອງອາຣາມ -
ພວກເຂົາຈະເປັນເຫມືອນກັບສະຫງ່າລາສີຂອງຄົນອິດສະຣາເອນ - ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.

[4]ເຫດການຈະມາເຖິງໃນວັນນັ້ນ ທີ່ຄວາມຍິ່ງໃຫຍ່ຂອງຢາໂຄບຈະເບົາບາງລົງ, ແລະ ຄວາມຕຸ້ຍພີຂອງເນື້ອຫນັງຂອງເຂົາຈະຈ່ອຍຜອມລົງໄປ.
[5]ມັນຈະເປັນເຫມືອນກັບຕອນທີ່ຄົນເກັບກ່ຽວຮວບຮວມຕົ້ນເຂົ້າທີ່ຕັ້ງຢູ່, ແລະ ແຂນຂອງເຂົາກ່ຽວຮວງເຂົ້າ.
ມັນຈະເປັນເຫມືອນຕອນທີ່ຄົນເກັບຮວງເຂົ້າໃນຫຸບເຂົາເຣຟາອີມ.
[6]ການເກັບຮວງເຂົ້າຈະເຫລືອຢູ່, ແຕ່ຢ່າງໃດກໍຕາມ, ກໍຈະເຫມືອນຕອນທີ່ຕົ້ນຫມາກກອກເທດຖືກສັ່ນ: ລູກຫມາກກອກເທດສອງ ຫລື
ສາມລູກເທິງຍອດສູງສຸດ, ສີ່ ຫລື ຫ້າລູກທີ່ຢູ່ໃນກິ່ງທີ່ສູງສຸດຂອງຕົ້ນໄມ້ຜົນດົກ - ນີ້ເປັນຄຳປະກາດຂອງພຣະຢາເວ,
ພຣະເຈົ້າແຫ່ງອິດສະຣາເອນ.[7]ໃນວັນນັ້ນຄົນທັງຫລາຍຈະເບິ່ງໄປຍັງພຣະຜູ້ສ້າງຂອງພວກເຂົາ, ແລະ
ສາຍຕາຂອງພວກເຂົາຈະເບິ່ງອົງບໍຣິສຸດຂອງອິດສະຣາເອນ.
[8]ພວກເຂົາຈະບໍ່ເບິ່ງແທ່ນບູຊາເຫລົ່ານັ້ນ, ທີ່ເປັນຜົນງານຈາກມືຂອງພວກເຂົາ, ຫລື ພວກເຂົາຈະບໍ່ເບິ່ງສິ່ງທີ່ນິ້ວມືຂອງພວກເຂົາໄດ້ເຮັດ,
ທີ່ເປັນອາເຊຣາ ຫລື ຮູບປັ້ນຂອງດວງອາທິດ.
[9]ໃນວັນນັ້ນເມືອງທີ່ເຂັ້ມແຂງຂອງພວກເຂົາຈະເຫມືອນກັບປ່າດົງເທິງເນີນເຂົາທີ່ຖືກຖິ້ມຮ້າງເທິງຍອດສຸດຂອງຮ່ອມເຂົາທີ່ໄດ້ຖືກປະຕິເສດເພາະເຫດຄົນອິດສະຣາເອ
ແລະ ນັ້ນຈະກາຍເປັນທີ່ຮົກຮ້າງ.
[10]ເພາະເຈົ້າໄດ້ລືມພຣະເຈົ້າແຫ່ງຄວາມລອດພົ້ນຂອງເຈົ້າ, ແລະ ບໍ່ສົນໃຈຕໍ່ຫີນເຂັ້ມແຂງຂອງເຈົ້າ. ດັ່ງນັ້ນເຈົ້າຈະປູກຕົ້ນໄມ້ແຫ່ງຄວາມຍິນດີ,
ແລະ ເລີ່ມປັກກິ່ງອະງຸ່ນທີ່ໄດ້ຮັບມາຈາກຄົນຕ່າງດ້າວ.[11]ໃນວັນນັ້ນ ເຈົ້າຈະປູກ ແລະລ້ອມຮົ້ວໄວ້ ແລະ ໄຖ.
ໃນບໍ່ຊ້າຜົນລະປູກຂອງເຈົ້າຈະງອກຂຶ້ນ, ແຕ່ການເກັບກ່ຽວຈະບໍ່ໄດ້ຜົນໃນວັນແຫ່ງຄວາມໂສກເສົ້າ ແລະ ຄວາມເສຍໃຈຢ່າງຫມົດຫວັງ.
[12]ວິບັດ! ສຽງອຶກກະທຶກຂອງຄົນຫລວງຫລາຍ, ທີ່ດັງສະນັ່ນເຫມືອນສຽງຄະນອງຂອງທະເລ, ແລະ ການຈູ່ໂຈມຂອງຊົນຊາດທັງຫລາຍ,
ທີ່ຈູ່ໂຈມເຂົ້າມາເຫມືອນກັບນ້ຳມີພະລັງມະຫາສານທີ່ໄຫລບ່າລົງມາຢ່າງວ່ອງໄວ!
[13]ຊົນຊາດທັງຫລາຍຈະເປັ່ງສຽງກຶກຮ້ອງເຫມືອນກັບນ້ຳຫລວງຫລາຍທີ່ໄຫລບ່າຢ່າງວ່ອງໄວ, ແຕ່ພຣະເຈົ້າຈະຊີ້ງກຳລາບພວກເຂົາ.
ພວກເຂົາຈະຫນີໄປໄກໆ ແລະຈະຖືກໄລ່ຕາມເຫມືອນກັບໃບໄມ້ທີ່ແຫ້ງຕາຍແລ້ວຕໍ່ຫນ້າລົມເທິງພູເຂົາທັງຫລາຍ ແລະ
ເຫມືອນກັບໃບໄມ້ແຫ້ງທີ່ປິວໄປຕໍ່ຫນ້າລົມພາຍຸ[14]ໃນຕອນແລງເບິ່ງແມ້ຊ່າງຫນ້າຢ້ານ
ກ່ອນທີ່ຈະຮຸ່ງເຊົ້າເຂົາທັງຫລາຍກໍຈະຫາຍໄປແລ້ວນີ້ເປັນສ່ວນຫນຶ່ງຂອງຄົນເຫລົ່ານັ້ນທີ່ຊີງສັບພວກເຮົາຄົນຫລວງຫລາຍເຫລົ່ານັ້ນທີ່ປົ້ນພວກເຮົາ

 generated on Tue Jun 17 19:01:42 2025

18 [1]ວິບັດແກ່ແຜ່ນດິນທີ່ມີສຽງກະພືຂອງປີກ, ຊຶ່ງຢູ່ຕາມແມ່ນ້ຳແຫ່ງເອທີໂອເປຍ;[2]ຜູ້ທີ່ສົ່ງບັນດາທູດທັງຫລາຍມາທາງທະເລ,
ໃນເຮືອຕົ້ນກົກເທິງນ້ຳ. ຈົ່ງໄປເຖີດ, ເຈົ້າພວກຜູ້ສື່ສານທີ່ຮ້ອງໄວເອີຍ, ໄປຍັງຊົນຊາດທີ່ຕົວສູງ ແລະ ຜິວພັນກ້ຽງໃສ,
ໄປຍັງຊົນຊາດທີ່ທັງໃກ້ ຫລືໄກຕ່າງເກງກົວ, ຊົນຊາດທີ່ເຂັ້ມແຂງ ແລະ ຢຽບຢ້ຳລົງ, ຊຶ່ງແຜ່ນດິນຂອງເຂົາຖືກແບ່ງດ້ວຍແມ່ນ້ຳ.

[3]ພວກເຈົ້າທຸກຄົນທີ່ອາໃສຢູ່ໃນໂລກນີ້ ແລະພວກເຈົ້າທີ່ອາໃສຢູ່ເທິງແຜ່ນດິນໂລກ, ເມື່ອສ/ນຍານໄດ້ ຖືກຍົກຂຶ້ນເທິງພູເຂົາເຫລົ່ານັ້ນ,
ຈົ່ງເບິ່ງເຖີດ; ແລະ ເມື່ອແຕ່ແກເປົ່າຂຶ້ນ, ຈົ່ງຟັງເຖີດ.
[4]ນີ້ເປັນສິ່ງທີ່ພຣະຢາເວໄດ້ກ່າວກັບຂ້າພະເຈົ້າ, "ເຮົາຈະສັງເກດເບິ່ງຈາກທີ່ອາໃສຂອງເຮົາຢ່າງງຽບໆ ເຫມືອນກັບຄວາມຮ້ອນທີ່ຮ້ອນຂຶ້ນ,
ເມື່ອຢູ່ໃນແສງແດດ ເຫມືອນກັບເມກຫມອກທີ່ຢູ່ທ່າມກາງຄວາມຮ້ອນໃນລະດູເກັບກ່ຽວ.[5]ກ່ອນທີ່ຈະເຖິງລະດູເກັບກ່ຽວ,
ເມື່ອດອກໄມ້ບານຜ່ານພົ້ນໄປແລ້ວ, ແລະ ດອກໄມ້ກໍກາຍເປັນຜົນອະງຸ່ນກຳລັງສຸກ, ພຣະອົງຈະຊົ່ງຕັດກິ່ງເຫລົ່ານັ້ນ, ແລະ
ພຣະອົງຈະຊົ່ງຕັດພວກກິ່ງທີ່ແຜ່ຂະຫຍາຍລົງໄປ ແລະ ເອົາອອກໄປ.
[6]ກິ່ງໄມ້ເຫລົ່ານັ້ນຈະຖືກຝັງໄວ້ນຳກັນໃຫ້ແກ່ບັນດານົກທີ່ພູເຂົາທັງຫລາຍ ແລະ ໃຫ້ແກ່ສັດຕ່າງໆຂອງແຜ່ນດິນໂລກ.
ພວກນົກຈະກິນພວກມັນໃນລະດູຮ້ອນ, ແລະ
ສັດທັງປວງເທິງແຜ່ນດິນຈະກິນພວກມັນໃນລະດູຫນາວ."[7]ໃນເວລານັ້ນຂອງຖວາຍຈະຖືກນຳມາຍັງພຣະຢາເວຈອມໂຢທາ
ຈາກພວກຄົນທີ່ຕົວສູງແລະ ຜິວກ້ຽງໃສ, ຈາກຊົນຊາດທີ່ທັງຄົນຢູ່ໃກ້ແລະ ຢູ່ໄກຕ່າງເກງກົວ, ຊົນຊາດທີ່ເຂັ້ມແຂງແລະ ຢ້ຽບຢ້ຳລົງ,
ຊຶ່ງແຜ່ນດິນຂອງເຂົາຖືກແບ່ງດ້ວຍແມ່ນ້ຳ, ໄປຍັງສະຖານທີ່ແຫ່ງພຣະນາມຂອງພຣະຢາເວຈອມໂຢທາໄປຍັງພູເຂົາຊີໂອນ.


generated on Tue Jun 17 19:01:42 2025

19 [1]ຄຳປະກາດກ່ຽວກັບເອຢິບ. ເບິ່ງເຖີດ, ພຣະຢາເວຊົງປະທັບເທິງເມກທີ່ວ່ອງໄວ ແລະກຳລັງມາຍັງເອຢິບ;
ບັນດາຮູບເຄົາລົບຂອງເອຢິບກໍສັ່ນໄຫວຕໍ່ຫນ້າພຣະອົງ, ແລະ ໃຈຂອງຄົນເອຢິບກໍລະລາຍໄປພາຍໃນຕົວຂອງພວກເຂົາ.
[2]"ເຮົາຈະປຸກໃຫ້ຄົນເອຢິບຕໍ່ສູ້ກັບຄົນເອຢິບ: ຄົນຫນຶ່ງຈະຕໍ່ສູ້ກັບພີ່ນ້ອງຂອງຕົນ, ແລະ ຄົນຫນຶ່ງຈະຕໍ່ສູ້ກັບເພື່ອນບ້ານຂອງຕົນ;
ເມືອງຈະຕໍ່ສູ້ກັບເມືອງ ແລະ ຣາຊອານາຈັກຈະຕໍ່ສູ້ກັບຣາຊອານາຈັກ.

[3]ຈິດໃຈຂອງຄົນເອຢິບຈະອ່ອນເປືອຍຈາກພາຍໃນ. ເຮົາຈະທຳລາຍຄຳປຶກສາຂອງເຂົາແມ່ນວ່າພວກເຂົາໄດ້ສະແຫວງຫາຄຳປຶກສາ,
ຈາກບັນດາຮູບເຄົາລົບ, ວິນຍານຂອງຄົນຕາຍ ຄົນຊົງ, ແລະ ຫມໍຜີ.[4]ເຮົາຈະມອບຄົນເອຢິບໄວ້ໃນມືຂອງເຈົ້ານາຍທີ່ໂຫດຮ້າຍ
ແລະກະສັດທີ່ເຂັ້ມແຂງຈະປົກຄອງເຫນືອພວກເຂົາ - ນີ້ຄືຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາ."
[5]ນ້ຳໃນທະເລຈະຫົດແຫ້ງໄປ, ແລະ ແມ່ນ້ຳຈະແຫ້ງລົງ ແລະ ບໍ່ມີນ້ຳຢູ່ເລີຍ.[6]ແມ່ນ້ຳທັງຫລາຍຈະເນົ່າເຫມັນ.
ລຳທານທັງຫລາຍຂອງເອຢິບຈະຫົດແຫ້ງລົງ, ແລະ ພວກຕົ້ນກົກ ແລະ ຕົ້ນອໍ້ກໍຈະຫ່ຽວແຫ້ງໄປ.
[7]ພວກຕົ້ນກົກທີ່ຢູ່ຮິມແມ່ນ້ຳນິນ, ໃກ້ປາກແມ່ນ້ຳນິນ, ແລະ ທຸກສິ່ງທີ່ຫວ່ານລົງໃນທົ່ງນາຮິມແມ່ນ້ຳນິນກໍຈະແຫ້ງໄປ, ກາຍເປັນຜົງດິນ ແລະ
ປິວໄປ.[8]ພວກຊາວປະມົງຈະຄ່ຳຄວນ ແລະໂສກເສົ້າ, ແລະ ຜູ້ທີ່ໂຍນເບັດອອກໄປແມ່ນ້ຳນິນຈະໂສກເສົ້າ, ແລະ ພວກຄົນທີ່ໂຍນແຫ
ລົງໄປໃນນ້ຳຈະເສົ້າໃຈ.
[9]ພວກຄົນງານທີ່ສາງຕົ້ນປ່ານ ແລະພວກຄົນຕຳຜ້າຂາວກໍຈະອ່ອນແຮງ.[10]ພວກຄົນເຮັດງານຜ້າຂອງເອຢິບຈະຖືກບີບຄັ້ນ;
ທຸກຄົນທີ່ທຳງານເພື່ອຄ່າຈ້າງຈະເສົ້າໃຈຢູ່ພາຍໃນຕົວພວກເຂົາ.
[11]ພວກເຈົ້ານາຍຂອງເມືອງໂຊອານກໍໂງ່ງ່າວ. ຄຳແນະນຳຂອງບັນດາທີ່ປຶກສາທີ່ສະຫລາດທີ່ສຸດຂອງຟາໂຣກໍໄຮ້ປະໂຫຍດ.
ເຈົ້າຈະເວົ້າກັບຟາໂຣແນວໃດວ່າ, "ຂ້ານ້ອຍເປັນບຸດຊາຍຂອງພວກນັກປາດຜູ້ສະຫລາດ,
ເປັນລູກຊາຍຂອງບັນດາກະສັດບູຮານ?"[12]ແລ້ວພວກນັກປາດຂອງເຈົ້າຢູ່ທີ່ໃດ? ຂໍໃຫ້ພວກເຂົາບອກເຈົ້າ ແລະ
ເຮັດໃຫ້ພວກເຈົ້າໄດ້ຮູ້ວ່າພຣະຢາເວຈອມໂຍທາຊົງວາງແຜນຫຍັງກ່ຽວກັບເອຢິບໄວ້.
[13]ພວກເຈົ້ານາຍຂອງເມືອງໂຊອານກໍກາຍເປັນຄົນໂງ່ຈ້າ, ພວກເຈົ້ານາຍຂອງມຳຟິດກໍຖືກຫລອກແລ້ວ; ພວກເຂົາໄດ້ເຮັດໃຫ້ເອຢິບຫລົງທາງໄປ,
ຜູ້ທີ່ເປັນເສົາຫລັກຂອງບັນດາເຜົ່າຕ່າງໆຂອງປະເທດນັ້ນ.[14]ພຣະຢາເວໄດ້ຊົງປະປົນວິນຍານແຫ່ງການບິດເບືອນລົງໄປໃນທ່າມກາງຊົນຊາດນັ້ນ,
ແລະ ພວກເຂົາໄດ້ນຳເອຢິບໃຫ້ຫລົງທາງໄປໃນການກະທຳທຸກຢ່າງ, ເຫມືອນກັບຄົນເມົາທີ່ໂຊເຊຢູ່ໃນຮາກຂອງເຂົາ.
[15]ບໍ່ມີໃຜຈັກຄົນທີ່ຈະເຮັດຫຍັງເພື່ອເອຢິບໄດ້, ບໍ່ວ່າຈະເປັນຫົວ ຫລື ຫາງ, ກິ່ງຕົ້ນປາມ ຫລື ຕົ້ນກົກ.
[16]ໃນວັນນັ້ນ, ຄົນເອຢິບຈະເປັນເຫມືອນກັບພວກຜູ້ຍິງ. ພວກເຂົາຈະຕົວສັ່ນ ແລະ ຢ້ານກົວ ເພາະມືທີ່ໄດ້ຍົກຂຶ້ນແລ້ວຂອງພຣະຢາເວຈອມໂຍທາ
ທີ່ພຣະອົງຊົງຍົກຂຶ້ນເຫນືອພວກເຂົາ.[17]ແຜ່ນດິນຢູດາຈະກາຍເປັນເຫດໃຫ້ຄົນເອຢິບໂຊເຊ.
ເມື່ອຄົນໃດກໍຕາມໄດ້ລະນຶກເຖິງພວກເຂົາໃນຊົນຊາດນັ້ນ, ພວກເຂົາກໍຈະຢ້ານກົວ, ເພາະແຜນງານຂອງພຣະຢາເວ,
ທີ່ພຣະອົງກຳລັງຊົງວາງແຜນຕໍ່ສູ້ກັບພວກເຂົາ.
[18]ໃນວັນນັ້ນ ຈະມີເມືອງຫ້າເມືອງໃນແຜ່ນດິນເອຢິບທີ່ເວົ້າພາສາເຮັບເຣີ ແລະ ສາບານທີ່ຈະຈົ່ງຮັກພັກດີຕໍ່ພຣະຢາເວຈອມໂຍທາ.
ຫນຶ່ງໃນເມືອງເຫລົ່ານີ້ຈະຖືກຮ້ອງວ່າເມືອງແຫ່ງດວງອາທິດ.
[19]ຈະມີແທ່ນບູຊາຂອງພຣະຢາເວແທ່ນຫນຶ່ງຢູ່ກາງແຜ່ນດິນຂອງເອຢິບ, ແລະ ເສົາຫີນຫນຶ່ງແດ່ພຣະຢາເວທີ່ເຂດພົມແດນ.
[20]ຊຶ່ງຈະເປັນຫມາຍສຳຄັນ ແລະ ເປັນພຣະຍານແດ່ພຣະຢາເວຈອມໂຍທາໃນແຜ່ນດິນເອຢິບ.
ເມື່ອພວກເຂົາຮ້ອງທູດຕໍ່ພຣະຢາເວເພາະເຫດບັນດາຜູ້ທີ່ບີບບັງຄັບ, ພຣະອົງຈະຊົງສົ່ງຜູ້ຊ່ວຍໃຫ້ລອດພົ້ນແລະ
ຜູ້ປົກປ້ອງຄົນຫນຶ່ງມາໃຫ້ພວກເຂົາ, ແລະ ຜູ້ນັ້ນຈະຊ່ວຍກູ້ພວກເຂົາ.
[21]ພຣະຢາເວຈະຊົງເປັນທີ່ຮູ້ຈັກຕໍ່ເອຢິບ, ແລະ ຄົນເອຢິບຈະຍອມຮັບພຣະຢາເວໃນວັນນັ້ນ. ພວກເຂົາຈະນະມັດສະການດ້ວຍເຄື່ອງຖວາຍ ແລະ
ເຄື່ອງບູຊາຕ່າງໆ, ແລະ ຈະເຮັດການສາບານແລະ ແກ້ຄຳສາບານເຫລົ່ານັ້ນຕໍ່ພຣະຢາເວ.[22]ພຣະຢາເວຈະຊົງເຮັດໃຫ້ເອຢິບທົນທຸກ,
ການທົນທຸກ ແລະ ການຮັກສາໃຫ້ຫາຍ. ພວກເຂົາຈະກັບມາຫາພຣະຢາເວ; ພຣະອົງຈະຊົງຟັງຄຳອະທິຖານຂອງພວກເຂົາ ແລະ
ຈະຮັກສາພວກເຂົາໃຫ້ຫາຍ.
[23]ໃນວັນນັ້ນ ຈະມີທາງດ່ວນຈາກເອຢິບໄປຍັງອັດຊີເຣຍ, ແລະ ຄົນອັດຊີເຣຍຈະມາຍັງເອຢິບ, ແລະ ຄົນເອຢິບຈະໄປຍັງອັດຊີເຣຍ; ແລະ
ຄົນເອຢິບຈະນະມັດສະການຮ່ວມກັບຄົນອັດຊີເຣຍ.
[24]ໃນວັນນັ້ນ, ອິດສະຣາເອນຈະເປັນຫນຶ່ງໃນສາມກັບເອຢິບ ແລະ ອັດຊີເຣຍ, ຊຶ່ງເປັນພຣະພອນໃນທ່າມກາງແຜ່ນດິນໂລກ;
[25]ພຣະຢາເວຈອມໂຍທາຈະຊົງອວຍພອນພວກເຂົາ ແລະກ່າວວ່າ, "ຄວາມສຸກຈົ່ງມີແກ່ເອຢິບ, ຊົນຊາດຂອງເຮົາ;
ແກ່ອັດຊີເຣຍຜົນງານແຫ່ງມືຂອງເຮົາ; ແລະ ແກ່ອິດສະຣາເອນ, ມໍລະດົກຂອງເຮົາ."


generated on Tue Jun 17 19:01:42 2025

20 [1]ໃນປີທີ່ທາດທັນໄດ້ມາຍັງເມືອງອາສະໂດດ, ເມື່ອຊາກໂກນກະສັດແຫ່ງອັດຊີເຣຍໄດ້ສົ່ງເຂົາມາ, ເຂົາໄດ້ສູ້ຮົບກັບເມືອງອາສະໂດດ ແລະ
ຍຶດເມືອງນັ້ນໄດ້. [2]ໃນເວລານັ້ນ ພຣະຢາເວໄດ້ກ່າວໂດຍເອຊາຢາ ລູກຊາຍຂອງອາໂມດວ່າ, "ຈົ່ງໄປແລະ
ແກ້ຜ້າກະສອບອອກຈາກເອວຂອງເຈົ້າ, ແລະ ຖອດເກີບອອກຈາກຕີນຂອງເຈົ້າ." ເຂົາກໍໄດ້ເຮັດຕາມນັ້ນ, ຄືຍ່າງເປືອຍກາຍ ແລະ ຕີນເປົ່າ.

[3]ພຣະຢາເວໄດ້ກ່າວວ່າ, "ເຊັ່ນດຽວກັນກັບເອຊາຢາຜູ້ຮັບໃຊ້ຂອງເຮົາໄດ້ຍ່າງເປືອຍກາຍ ແລະຕີນເປົ່າເປັນເວລາສາມປີ,
ນີ້ເປັນຫມາຍສຳຄັນແລະ ລາງບອກເຫດກ່ຽວກັບເອຢິບ ແລະ ກ່ຽວກັບເອທີໂອເປຍ - [4]ໃນວິທີດຽວກັນນີ້ ກະສັດແຫ່ງອັດຊີເຣຍ
ຈະນຳພວກຊະເລີຍຂອງເອຢິບໄປ, ແລະ ຄົນທີ່ຖືກກວາດຕ້ອນໄປຂອງເອທີໂອເປຍ, ທັງຄົນຫນຸ່ມສາວ ແລະ ຄົນແກ່ ຈະເປືອຍກາຍ, ແລະ
ຕີນເປົ່າ ແລະ ເປີດກົ້ນ, ທີ່ເປັນຄວາມອັບອາຍຂອງເອຢິບ.
[5]ພວກເຂົາຈະຖືກເຮັດໃຫ້ທໍ້ຖອຍ ແລະ ອັບອາຍ, ເພາະເອທີໂອເປຍເປັນຄວາມຫວັງຂອງພວກເຂົາ ແລະ
ເອຢິບກໍເປັນພຣະສະຫງ່າຣາສີຂອງພວກເຂົາ. [6]ພວກຜູ້ທີ່ອາໃສຢູ່ຊາຍຝັ່ງທະເລເຫລົ່ານີ້ ຈະກ່າວໃນວັນນັ້ນວ່າ, 'ແທ້ຈິງແລ້ວ,
ນີ້ເຄີຍເປັນແຫລ່ງແຫ່ງຄວາມຫວັງຂອງພວກເຮົາ, ຊຶ່ງພວກເຮົາໄດ້ຫນີໄປຂໍໃຫ້ຊ່ວຍເຫລືອໃຫ້ລອດພົ້ນຈາກກະສັດ ແຫ່ງອັດຊີເຣຍ, ແລະ
ຕອນນີ້ ພວກເຮົາຈະຫນີລອດໄປໄດ້ຢ່າງໃດ?"'

 generated on Tue Jun 17 19:01:42 2025

21 [1]ຄຳປະກາດກ່ຽວກັບທະເລຊາຍໃກ້ທະເລ. ເຫມືອນພາຍຸຫມູນທີ່ພັດຊັດຜ່ານເນເກບ ພັດມາຈາກຖິ່ນແຫ້ງແລ້ງກັນດານ,
ຈາກແຜ່ນດິນທີ່ຫນ້າຢ້ານ.[2]ນິມິດຫນຶ່ງໄດ້ຊີ້ງປະທານແກ່ຂ້າພະເຈົ້າ: ທີ່ເຮັດໃຫ້ເປັນທຸກ ຄົນທໍລະຍົດກໍ່ຍ່ອມເຮັດການທໍລະຍົດ, ແລະ
ຄົນທຳລາຍກໍ່ຍ່ອມທຳລາຍ. ເອລາມເອີຍ, ຈົ່ງລຸກຂຶ້ນ ແລະ ໂຈມຕີ; ມີເດຍເອີຍ, ຈົ່ງລ້ອມໄວ້
ເຮົາຈະເຮັດໃຫ້ການຄຳຄວນຂອງເມືອງນັ້ນສິ້ນສຸດລົງ.

[3]ເພາະສະນັ້ນ ບັ້ນເອວຂອງຂ້າພະເຈົ້າຈຶ່ງເຕັມດ້ວຍຄວາມເຈັບປວດ;
ຄວາມເຈັບປວດເຫມືອນຢ່າງຜູ້ຍິງເຈັບທ້ອງເກີດລູກໄດ້ເກາະກຸມຂ້າພະເຈົ້າ; ຂ້າພະເຈົ້າໄດ້ໂນ້ມຕົວລົງເພາະສິ່ງທີ່ຂ້າພະເຈົ້າໄດ້ຍິນ;
ຂ້າພະເຈົ້າໄດ້ກະວົນກະວາຍໃຈກັບສິ່ງທີ່ໄດ້ເຫັນ.[4]ໃຈຂອງຂ້າພະເຈົ້າກໍ່ສັ່ນ, ຂ້າພະເຈົ້າຕົວສັ່ນດ້ວຍຄວາມຢ້ານ. ຕອນຄ່ຳ,
ຄືເວລາໃນແຕ່ລະມື້ທີ່ຂ້າພະເຈົ້າມັກ, ໄດ້ເຮັດໃຫ້ຂ້າພະເຈົ້າຢ້ານກົວ.
[5]ພວກເຂົາຕຽມໂຕະໄວ້, ພວກເຂົາປູພົມ ແລະ ກິນ ແລະ ດື່ມ; ເຈົ້ານາຍທັງຫລາຍເອີຍ, ຈົ່ງລຸກຂຶ້ນ, ຈົ່ງເຈີມໂລ້ຂອງພວກທ່ານດ້ວຍນ້ຳມັນ.
[6]ເພາະນີ້ເປັນສິ່ງທີ່ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ, "ຈົ່ງໄປເຖີດ, ຈົ່ງຕັ້ງຍາມຄົນຫນຶ່ງໄວ້; ເຂົາຕ້ອງແຈ້ງສິ່ງທີ່ເຂົາເຫັນໃຫ້ຮູ້.
[7]ເມື່ອເຂົາເຫັນລົດມ້າ, ຄົນມ້າຄູ່ຫນຶ່ງ, ບັນດາຄົນຂີ່ລາ, ແລະ ຄົນຂີ່ອູດ, ແລ້ວເຂົາຕ້ອງໃຫ້ຄວາມສົນໃຈ ແລະ ຕື່ນຕົວຢ່າງຫລາຍ."
[8]ຄົນຍາມຄົນນັ້ນຮ້ອງວ່າ, "ເຈົ້ານາຍເອີຍ, ຂ້າພະເຈົ້າຢືນຕະຫລອດວັນເທິງຫໍຄອຍ,
ແລະຂ້າພະເຈົ້າຢືນປະຈຳທີ່ຂອງຂ້າພະເຈົ້າຢູ່ຕະຫລອດຄືນ."[9]ລົດມ້າຄັນຫນຶ່ງພ້ອມກັບຜູ້ຊາຍຄົນຫນຶ່ງ ແລະ ພົນມ້າຄູ່ຫນຶ່ງມາທີ່ນີ້ເຂົາຮ້ອງວ່າ,
"ບາບີໂລນແຕກແລ້ວ, ແຕກແລ້ວ, ແລະ ບັນດາຮູບແກະສະລັກທັງຫມົດຂອງພະຂອງເມືອງນັ້ນໄດ້ແຕກຫັກລົງເທິງພື້ນດິນ."
[10]ພວກຄົນທີ່ຖືກນວດ ແລະ ຖືກຝັດຮ່ອນຂອງຂ້າພະເຈົ້າ, ພວກເດັກໆໃນລານນວດເຂົ້າຂອງຂ້າພະເຈົ້າ!
ສິ່ງທີ່ຂ້າພະເຈົ້າໄດ້ຍິນຈາກພຣະຢາເວຈອມໂຢທາ, ພຣະເຈົ້າແຫ່ງອິດສະຣາເອນ, ຂ້າພະເຈົ້າໄດ້ປະກາດແກ່ພວກເຈົ້າ.
[11]ຄຳປະກາດກ່ຽວກັບດູມານ. ຄົນຫນຶ່ງຮ້ອງຖາມຂ້າພະເຈົ້າຈາກເຊອີວ່າ, "ຄົນຍາມເອີຍ, ຄືນນີ້ຍັງອີກດົນປານໃດ? ຄົນຍາມເອີຍ,
ຄືນນີ້ຍັງອີກດົນປານໃດ?"[12]ຄົນຍາມໄດ້ຕອບວ່າ, "ເວລາເຊົ້າມາເຖິງ ແລະ ເວລາກາງຄືນກໍ່ມາດ້ວຍ. ຖ້າເຈົ້າຕ້ອງການຖາມ, ກໍ່ຈົ່ງຖາມເຖີດ;
ແລະ ກັບມາອີກ."
[13]ຄຳປະກາດກ່ຽວກັບອາຣາເບຍກ ບັນດາກອງຂະບວນຂອງຄົນອາຣາເບຍເອີຍ. ພວກເຈົ້າຄ້າງຄືນໃນຖິ່ນແຫ້ງແລ້ງກັນດານອາຣາເບຍ.
[14]ຊາວແຜ່ນດິນເທມາເອີຍ ຈົ່ງເອົານ້ຳມາໃຫ້ກັບຄົນທີ່ກະຫາຍ; ຈົ່ງມາພົບກັບພວກລີ້ໄພພ້ອມກັບອາຫານ.[15]ເພາະພວກເຂົາໄດ້ຫນີໄປຈາກດາບ,
ຫນີຈາກດາບທີ່ຊັກອອກມາ, ຫນີຈາກຄັນທະນູທີ່ໂກ່ງຢູ່, ແລະ ຫນີຈາກການເຮັດການສູ້ຮົບຢ່າງຫນັກ.
[16]ເພາະນີ້ເປັນສິ່ງທີ່ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ, "ຄວາມຍິ່ງໃຫຍ່ທັງຫມົດຂອງຄົນເຄດານຈະສິ້ນສຸດລົງພາຍໃນປີດຽວ,
ຕາມປີລູກຈ້າງຫນຶ່ງປີຈະໄດ້ເຫັນການນີ້.[17]ພວກນັກລົບຂອງຄົນເຄດານຈະຍັງຄົງເຫລືອຢູ່ ແຕ່ພົນທະນູພຽງບໍ່ຈັກຄົນເທົ່ານັ້ນ, "ເພາະພຣະຢາເວ,
ພຣະເຈົ້າແຫ່ງອິດສະຣາເອນໄດ້ກ່າວໄວ້ແລ້ວ.

 generated on Tue Jun 17 19:01:42 2025

22 [1]ຄຳປະກາດກ່ຽວກັບຮ່ວມເຂົາແຫ່ງນິມິດ: ເພາະເຫດໃດທີ່ພວກເຈົ້າທຸກຄົນຈຶ່ງໄດ້ຂຶ້ນໄປເທິງຫລັງຄາບ້ານ?
[2]ເພາະເຫດທີ່ພວກເຈົ້າໄດ້ຍິນເມືອງທີ່ມີສຽງດັງອຶກກະທຶກ, ນະຄອນທີ່ເຕັມດ້ວຍຄວາມລື່ນເລີງບໍ?
ພວກຄົນຕາຍຂອງພວກເຈົ້າບໍ່ໄດ້ຖືກຂ້າດ້ວຍດາບ, ແລະ ພວກເຂົາບໍ່ໄດ້ຕາຍໃນສົງຄາມ.

[3]ພວກຜູ້ປົກຄອງທັງຫມົດຂອງພວກເຈົ້າໄດ້ຫນີໄປນຳກັນ, ແຕ່ພວກເຂົາກໍຖືກຈັບໄດ້ໂດຍບໍ່ຕ້ອງໃຊ້ຄັນທະນູ; ພວກເຂົາທຸກຄົນໄດ້ຖືກຈັບດ້ວຍກັນ,
ເຖິງແມ່ນວ່າພວກເຂົາໄດ້ຫນີໄປໄກແລ້ວ.[4]ເພາະສະນັ້ນ ຂ້າພະເຈົ້າຈຶ່ງໄດ້ກ່າວວ່າ, "ຢ່າເບິ່ງຂ້າພະເຈົ້າ ຂ້າພະເຈົ້າຈະຮ້ອງໄຫ້ຢ່າງຂົມຂື່ນ
ຢ່າພະຍາຍາມປອບໂຍນຂ້າພະເຈົ້າກ່ຽວກັບການທຳລາຍຊົນຊາດຂອງຂ້າພະເຈົ້າເລີຍ"
[5]ເພາະມີວັນແຫ່ງຄວາມວຸ້ນວາຍ ການຢຽບຢ່ຳ ແລະຄວາມສັບສົນວຸ້ນວາຍຕໍ່
ແລະພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາໃນຮ່ວມພູແຫ່ງນິມິດ ກຳແພງຈະຖືກທຳລາຍລົງ
ແລະປະຊາຊົນຮ້ອງອອກໄປເຖິງພູເຂົາເຫລົ່ານັ້ນ[6]ເອລາມຈັບແລ່ງທະນູພ້ອມກັບພວກພົນຂັບແລະພວກພົນມ້າແລະວາງໂລ້ໄວ້ໂດຍບໍ່ໄດ້ຄຸມ[7]ສິ່ງທີ່ຈະເກີດຂຶ້ນກັບບັນດ
ແລະພົນມ້າຈະຢືນປະຈຳຕຳແຫນ່ງທີ່ປະຕູເມືອງ
[8]ພຣະອົງໄດ້ຊົງເອົາການປົກປ້ອງຂອງຢູດາຍໄປແລ້ວ ແລະໃນວັນນັ້ນ
ພວກເຈົ້າໄດ້ເບິ່ງຫາອາວຸດໃນສາງ[9]ພວກເຈົ້າໄດ້ເຫັນຊ່ອງຊຶ່ງຂອງນະຄອນດາວິດທີ່ມີຢູ່ຫລວງຫລາຍ ແລະພວກເຈົ້າໄດ້ເກັບກັກນ້ຳໃນສະລ້າງໄວ້
[10]ພວກເຈົ້າໄດ້ນັບຈຳນວນບ້ານເຮືອນຂອງກຸງເຢລູຊາເລັມ
ແລະພວກເຈົ້າໄດ້ຮື້ບ້ານເຫລົ່ານັ້ນມາເສີມກຳແພງ[11]ພວກເຈົ້າໄດ້ສ້າງທີ່ເກັບນ້ຳໄວ້ລະຫວ່າງກຳແພງທັງສອງດ້ານສຳຫລັບນ້ຳຂອງສະເກົ່າ
ແຕ່ພວກເຈົ້າບໍ່ໄດ້ລະນຶກເຖິງຜູ້ສ້າງເມືອງນີ້ ຜູ້ທີ່ໄດ້ວາງແຜນເມືອງນັ້ນມດົນແລ້ວ
[12]ໃນວັນນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາໄດ້ຊົງຮ້ອງໃຫ້ມີການຄ່ຳຄວນ ຄວາມໂສ້ເສົ້າ
ແຖຫົວແລະການໃສ່ຜ້າກະສອບ[13]ແຕ່ເບິ່ງເຖີດກັບມີການສະຫລອງແລະຄວາມຍິນດີ ມີການຂ້າຝູງງົວແລະສັງຫານຝູງແກະ
ການກິນເນື້ອແລະການດື່ມເຫລົ້າອະງຸ່ນ ໃຫ້ພວກເຮົາກິນ ແລະດື່ມເຖີດ
ເພາະມື້ອື່ນພວກເຮົາຈະຕາຍ[14]ພຣະຢາເວຈອມໂຍທາໄດ້ຊົງສຳແດງເຫດການນີ້ໃນຫູຂອງຂ້າພະເຈົ້າ
"ພວກເຈົ້າຈະບໍ່ໄດ້ຮັບການອະໄພຈາກຄວາມຊົ່ວຮ້າຍນີ້ຢ່າງແນ່ນອນ ຈົນກວ່າພວກເຈົ້າຈະຕາຍ"
ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້
[15]ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາກ່າງດັ່ງນີ້ວ່າ "ຈົ່ງໄປຫາເຈົ້າພະນັກງານຄົນນີ້ ໄປຫາເຊັບນາ
ຜູ້ທີ່ດູແລຣາຊສຳນັກແລະກ່າວວ່າ[16]ເຈົ້າກຳລັງເຮັດຫຍັງທີ່ນີ້ແລະໃຜໄດ້ອານຸຍາດໃຫ້ເຈົ້າເຈາະອຸບມຸງສຳຫລັບຕົວເຈົ້າເອງ
ເຈາະລຸມຝັງສົບເທິງທີ່ສູງແລະແກະສະລັກສ່ວນທີ່ເຫລືອໃນຫີນນັ້ນ?"'
[17]ເບິ່ງແມ້ ຄົນທີ່ມີອຳນາດ ພຣະຢາເວຈະຊົງໂຍນເຈົ້າອອກໄປ ແລະຈະຊົງທຳລາຍເຈົ້າ
ພຣະອົງຈະຊົງຍຶດຕົວເຈົ້າໄວ້ແນ່ນ[18]ພຣະອົງຈະຊົງຫມຸນຕົວເຈົ້າຮອບແລ້ວຮອບອີກຢ່າງແນ່ນອນ
ແລະຂວ້າງເຈົ້າເຫມືອນຫມາກບານໄປຍັງດິນແດນທີ່ກວ້າງໃຫຍ່ ເຈົ້າຈະຕາຍທີ່ນັ້ນ ແລະຄວາມພູມໃຈຂອງລົດມ້າສຶກຂອງເຈົ້າຈະຢູ່ທີ່ນັ້ນ
ເຈົ້າຈະເປັນຄວາມອັບອາຍຕໍ່ບ້ານຂອງເຈົ້ານາຍຂອງເຈົ້າ[19]ເຈົ້າຈະຖືກດຶງໃຫ້ຕົກຕໍ່ລົງ
[20]ຄືເອລີອາກິມລູກຊາຍຂອງຮິນກີຢາ[21]ເຮົາຈະເອົາເສື້ອຍົດຂອງເຈົ້າມາສວມໃຫ້ເຂົາ ແລະຈະເອົາສາຍແອວຂອງເຈົ້າມາຄາດໃຫ້ເຂົາ
ແລະເຮົາຈະມອບອຳນາດຂອງເຈົ້າໄວ້ໃນມືຂອງເຂົາ
ເຂົາຈະເປັນພໍ່ຂອງຊາວກຸງເຢຣູຊາເລັມແລະວົງວານຂອງຢູດາ[22]ເຮົາຈະມອບກະແຈຂອງຣາຊວົງດາວິດເທິງບ່າຂອງເຂົາ ເຂົາຈະເປີດ
ແລະບໍ່ມີໃຜຈະປິດໄດ້ ເຂົາຈະປິດ ແລະບໍ່ມີໃຜຈະເປີດໄດ້
[23]ເຮົາຈະຍຶດເຂົາໄວ້ ຕອກມຸດໄວ້ໃນທີ່ຫມັ້ນຄົງ
ແລະເຂົາຈະເປັນທີ່ນັ່ງທີ່ມີກຽດຂອງວົງວານຂອງພໍ່ຂອງເຂົາ[24]ພວກເຂົາຈະແຂວນກຽດຕິຍົດທັງຫມົດຂອງວົງວານຂອງພໍ່ຂອງເຂົາໄວ້ທີ່ເຂົາ
ແລະເຊື້ອສາຍຂອງເຂົາ ເຄື່ອງໃຊ້ນ້ອຍໆທຸກໃບຕັ້ງແຕ່ຖ້ວຍໄປຈົນເຖິງໂຖທັງຫມົດ
[25]ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາວ່າ ໃນມື້ນັ້ນ ມຸດທີ່ຕອກລົງໃນທີ່ຫມັ້ນຄົງຈະທານບໍ່ໄຫວ ແລະຈະຖອນອອກໄປແລະລົ້ມລົງ
ແລະພາລະຫນັກທີ່ກໍ່ຢູ່ເທິງນັ້ນກໍຈະຖືກຕັດອອກ ເພາະພຣະຢາເວໄດ້ກ່າວໄວ້ແລ້ວ

 generated on Tue Jun 17 19:01:42 2025

23 [1]ຄຳປະກາດກ່ຽວກັບຕີເຣ ເຮືອທັງຫລາຍຂອງເມືອງຕາກຊິດເອີຍ ຈົ່ງຄ່ຳຄວນເຖີດເພາະບໍ່ມີທັງບ້ານແລະທ່າເຮືອເລີຍ
ພວກເຂົາໄດ້ຮັບການເປີດເຜີຍກ່ຽວກັບເມືອງນີ້ຈາກແຜ່ນດິນໄປໄຊປຣັດ ບັນດາຜູ້ທີ່ອາໃສຢູ່ຕາມຊາຍຝັ່ງທະເລເອີຍ[2]ຈົ່ງງຽບໄວ້
ພໍ່ຄ້າແຫ່ງເມືອງຊີໂດນຜູ້ທີ່ເດີນທາງຂ້າມທະເລມາໄດ້ເຮັດໃຫ້ພວກເຈົ້າອີ່ມ[3]ເຂົ້າຈາກເອຢິບໄດ້ຂ້າມນ້ຳຫລວ ງຫລາຍມາ
ຜົນທີ່ເກັບກ່ຽວໄດ້ແຫ່ງແມ່ນ້ຳນິນໄດ້ເປັນ ຜົນພະລິດຂອງເມືອງນັ້ນ ແລະເມືອງນັ້ນໄດ້ກາຍເປັນແຫ່ງຄ້າຂາຍຂອງຊົນຊາດທັງຫລາຍ

[4]ຊີໂດນເອີຍ; ຜູ້ທີ່ມີອຳນາດແຫ່ງທະເລ ຈົ່ງອັບອາຍເຖີດ, ເພາະທະເລໄດ້ເວົ້າໄວ້ແລ້ວວ່າ, "ເຮົາບໍ່ເຄີຍເຈັບທ້ອງ ແລະ ບໍ່ເຄີຍເກີດລູກ, ແລະ
ບໍ່ເຄີຍລ້ຽງດູພວກຄົນຫນຸ່ມ ຫລືເບິ່ງແຍງພວກຍິງສາວ."[5]ເມື່ອຂ່າວຄາວນັ້ນມາເຖິງເອຢິບ, ພວກເຂົາກໍຈະເສົ້າໃຈກ່ຽວກັບຕີເຣ.
[6]ພວກຄົນທີ່ອາໃສຢູ່ຕາມຊາຍຝັ່ງທະເລເອີຍ ຈົ່ງຂ້າມໄປຍັງເມືອງຕາກຊິດສາ ຈົ່ງຄ່ຳຄວນເຖີດ[7]ເມືອງທີ່ເຕັມດ້ວຍຄວາມຮື່ນເຣີງເອີຍ
ເຫດການນີ້ໄດ້ເກີດກັບເຈົ້າບໍ່ ເມືອງທີ່ມີຕົ້ນກຳເນີດມາແຕ່ສະໄຫມໂບຮານ ເມືອງທີ່ຕີນຂອງມັນໄດ້ພາໄປໄກເພື່ອຕັ້ງຖິ່ນຖານໃນແດນຕ່າງດ້າວ?
[8]ໃຜໄໄດ້ວາງແຜນນີ້ຕໍ່ສູ້ກັບຕີເຣ ຜູ້ທີ່ໃຫ້ມົງກຸດທັງຫລາຍ ພວກພໍ່ຄ້າຂອງໃຜທີ່ເປັນພວກເຈົ້ານາຍ
ພວກຄົນຄ້າຂາຍຂອງໃຜທີ່ເປັນບັນດາຄົນທີ່ມີກຽດໃນແຜ່ນດິນໂລກ?
[9]ເພື່ອເຮັດໃຫ້ຄວາມຢັ້ຍິ່ງແລະຄວາມຍິ່ງໃຫຍ່ທັງຫມົດຂອງເມືອງນີ້ໄດ້ຮັບຄວາມອັບປະຍົດ
ແລະເຮັດໃຫ້ທຸກຄົນທີ່ມີກຽດເທິງແຜ່ນດິນໂລກໃນເມືອງນີ້ໄດ້ຮັບຄວາມອັບອາຍ
[10]ລູກສາວແຫ່ງເມືອງຕາກຊິດເອີຍ ຈົ່ງໄຖທີ່ດິນຂອງເຈົ້າ ຢ່າງຄົນທີ່ໄຖແມ່ນ້ຳນິນ
ບໍ່ມີຕະຫລາດຄ້າຂາຍໃນຕີເຣອີກຕໍ່ໄປແລ້ວ[11]ພຣະຢາເວໄດ້ຊົງຢື່ນມືອອກເຫນືອທະເລນັ້ນແລະພຣະອົງໄດ້ຊົງສັ່ນຣາຊອານາຈັກເຫລົ່ານັ້ນ
ພຣະອົງໄດ້ຊົງບັນຊາກ່ຽວກັບໂຟນີເຊຍ ໃຫ້ທຳລາຍປ້ອມປາການທັງຫລາຍ[12]ພຣະອົງໄດ້ກ່າວວ່າ
"ລູກສາວພົມມະຈາລີແຫ່ງຊີໂດນຜູ້ຖືກບີບບັງຄັບເອີຍ ເຈົ້າຈະບໍ່ມ່ວນໃຈອີກຕໍ່ໄປ ຈົ່ງລຸກຂຶ້ນຈົ່ງຂ້າມໄປຍັງໄຊປຣັດ
ແຕ່ເຈົ້າກໍຈະບໍ່ໄດ້ພັກສະງົບທີ່ນັ້ນ
[13]ຈົ່ງເບິ່ງແຜ່ນດິນຂອງຄົນບາບີໂລນ ຊົນຊາດນີ້ໄດ້ສິ້ນສຸດແລ້ວ ຄົນອັດຊີເຣຍໄດ້ເຮັດໃຫ້ເມືອງນັ້ນຮົກຮ້າງວ່າງເປົ່າເປັນທີ່ຢູ່ຂອງສັດປ່າ
ພວກເຂົາໄດ້ກໍ່ເຊີງເທີນຂອງພວກເຂົາຂຶ້ນ ພວກເຂົາໄດ້ທຳລາຍວັງທັງຫລາຍຂອງເມືອງນັ້ນຈົນຫມົດສິ້ນ ພວກເຂົາໄດ້
ເຮັດໃຫ້ເມືອງນັ້ນເປັນກອງຊາກເພພັງ[14]ບັນດາເຮືອແຫ່ງເມືອງຕາກຊິດເອີຍ ຈົ່ງຄ່ຳຄວນເຖີດ ເພາະທີ່ລີ້ໄພຂອງພວກເຈົ້າໄດ້ຖືກທຳລາຍແລ້ວ
[15]ໃນວັນນັ້ນ ເມືອງຕີເຣຈະຖືກລືມໄປເປັນເວລາເຈັດສິບປີ ເຫມືອນກັບອາຍຸຂອງກະສັດອົງຫນຶ່ງ ຫລັງຈາກທີ່ສິ້ນສຸດເຈັດສິບປີແລ້ວ
ຈະມີບາງຢ່າງເກີດຂຶ້ນໃນຕີເຣເຫມືອນກັບໃນບົດເພງຂອງຍິງໂສເພນີ[16]ຍິງງາມເມືອງທີ່ຖືກທີ່ຖືກລືມເອີຍ ຈົ່ງຈັບພິນ ຍ່າງໄປທົ່ວເມືອງ
ຈົ່ງຫລິ້ນພິນຢ່າງມ່ວນ ຮ້ອງເພງຫລາຍໆ ເພງ ເພື່ອໃຫ້ຄົນລະນຶກເຖິງເຈົ້າໄດ້ອີກ
[17]ເມື່ອເວລານັ້ນມາເຖິງຫລັງຈາກເຈັດສິບປີແລ້ວ ພຣະຢາເວຈະຊົງຊ່ວຍຕີເຣ
ແລະເມືອງນັ້ນຈະເລີ່ມຫາເງິນອີກໂດຍການເຮັດວຽກຢ່າງກັບຍິງໂສເພນີຄົນຫນຶ່ງແລະເມືອງນັ້ນຈະຄ້າຂາຍກັບທຸກຣາຊອານາຈັກຂອງແຜ່ນດິນໂລກ[18]ຜົນກຳໄລແລະ
ລາຍໄດ້ເຫລົ່ານັ້ນຈະບໍ່ຖືກສະສົມຫລືເກັບໄວ້ໃນຄັງ ເພາະກຳໄລຂອງເມືອງນັ້ນຈະມອບໃຫ້ແກ່ພວກຄົນທີ່ອາໃສຢູ່ຕໍ່ຫນ້າຂອງພຣະຢາເວ
ແລະຈະໃຊ້ຈ່າຍເພື່ອຈັດຫາອາຫານຢ່າງອຸດົມໃຫ້ກັບພວກເຂົາແລະເພື່ອພວກເຂົາຈະມີເສື້ອຜ້າທີ່ມີຄຸນນະພາບດີທີ່ສຸດດ້ວຍ


generated on Tue Jun 17 19:01:42 2025

# 24

[1]ເບິ່ງເຖີດພຣະຢາເວຈະຊົງທຳລາຍແຜ່ນດິນໂລກແລະຊົງເຮັດໃຫ້ວ່າງເປົ່າທັງຊົງທຳລາຍພື້ນຜິວຂອງໂລກ ແລະ
ຊົງເຮັດໃຫ້ຜູ້ທີ່ຢູ່ອາໃສເທິງໂລກນີ້ກະແຈກກະຈາຍໄປ[2]ເຫດການນັ້ນຈະເກີດຂຶ້ນເກີດກັບປະຊາຊົນຢ່າງໃດກໍຈະເກີດກັບປະໂຣຫິດຢ່ານັ້ນເກີດກັບຄົນຮັບໃຊ້ຢ່າງໃດ
ເກີດກັບຜູ້ຮັບຜົນປະໂຫຍດ

[3]ແຜ່ນດິນໂລກຈະຖືກທຳລາຍລ້າງຈົນສິ້ນຊາກແລະຖືກປົ້ນຈົນຫມົດສິ້ນເພາະພຣະຢາເວໄດ້ກ່າວຄຳສັ່ງນີ້ໄວ້ແລ້ວແຜ່ນດິນໂລກແຫ້ງຜາກແລະຫ່ຽວ[4]ໂລກນີ້ກໍຫ່ຽວ
ແລະໄດ້ຫັກຄຳສັນຍານິລັນນັ້ນ
[6]ເພາະສະນັ້ນຄຳສາບແຊ່ງກໍກືນກິນໂລກນີ້ ແລະຜູ້ທີ່ອາໃສຢູ່ໃນໂລກກໍຖືກພົບວ່າມີຄວາມຜິດຜູ້ທີ່ອາໃສຢູ່ໃນໂລກຈຶ່ງຖືກເຜົາຜານ
ແລະເຫລືອຢູ່ພຽງບໍ່ຈັກຄົນ[7]ເຫລົ້າອະງຸ່ນໃຫມ່ກໍຫົດແຫ້ງໄປກົກອະງຸ່ນກໍຫ່ຽວແຫ້ງຜູ້ທີ່ໃຈມ່ວນຊື່ນທຸກຄົນກໍຄ່ຳຄວນ
[8]ສຽງຄວາມສຸກຂອງກອງກໍຢຸດໄປ
ແລະຄວາມມ່ວນຊື່ນຂອງພວກຄົນທີ່ຮື່ນເຮີງສຽງອ່ອນຊ້ອຍຂອງພິນກໍງຽບໄປ[9]ພວກເຂົາບໍ່ດື່ມເຫລົ້າອະງຸ່ນແລະຮ້ອງເພງອີກຕໍ່ໄປ
ແລະນ້ຳເມົາກໍຂົມຕໍ່ພວກຄົນທີ່ດື່ມມັນ
[10]ເມືອງທີ່ສັບສົນວຸ່ນວາຍນັ້ນໄດ້ພັງທະລາຍລົງບ້ານເຮືອນທຸກຫລັງໄດ້ປິດແລະຮ້າງເປົ່າ[11]ມີສຽງຮ້ອງໃຫ້ຕາມທາງເນື່ອງຈາກເຫລົ້າອະງຸ່ນຄວາມຊື່ນບານທັງຫມົດກໍມື
[12]ເຫລືອໄວ້ແຕ່ຄວາມວ່າງເປົ່າໃນເມືອງແລະປະຕູເມືອງກໍຖືກທຳລາຍເປັນຊາກປັກຫັກພັງ[13]ເພາະນີ້ເປັນເຫດການທີ່ຈະເກີດຂຶ້ນກັບແຜ່ນດິນໂລກທັງສິ້ນທ່າມກາງຊົນຊ
[14]ພວກເຂົາຈະເປັ່ງສຽງຂອງພວກເຂົາຂຶ້ນແລະໂຫ່ຮ້ອງເຖິງພຣະສະງ່າງາມຂອງພຣະຢາເວ ແລະ
ຈະໂຫ່ຮ້ອງດ້ວຍຄວາມຊື່ນຊົມຍິນດີຈາກທະເລ[15]ເພາະສະນັ້ນຈົ່ງຖວາຍພຣະກຽດແດ່ພຣະຢາເວໃນທາງທິດຕາເວັນອອກ ແລະ
ຈົ່ງຖວາຍພຣະສິຣິແດ່ ພຣະນາມຂອງພຣະຢາເວພຣະເຈົ້າຂອງອິດສະຣາເອນໃນເກາະຕ່າງໆໃນທະເລ
[16]ເຮົາໄດ້ຍິນສຽງເພງຈາກທີ່ສຸດປາຍແຜ່ນດິນໂລກວ່າ "ພຣະສິຣິມີແດ່ພຣະອົງຜູ້ຊົງຊອບທຳ" ແຕ່ຂ້າພະເຈົ້າໄດ້ກ່າວວ່າ
"ວິບັດແກ່ຂ້າພະເຈົ້າຂ້າພະເຈົ້າໄດ້ອ່ອນລ້າໄປຂ້າພະເຈົ້າໄດ້ອ່ອນລ້າໄປແລ້ວຄົນທໍລະຍົດກໍໄດ້ເຮັດການທໍລະຍົດແມ່ນແລ້ວຄົນທີ່ທໍລະຍົດໄດ້ເຮັດການທໍລະຍົດຢ່າງ
[17]ຜູ້ທີ່ອາໃສຢູ່ເທິງແຜ່ນດິນໂລກເອີຍ
ຄວາມເປັນຕາຢ້ານລຸມພາງແລະກັບດັກມາເຖິງພວກເຈົ້າ[18]ຄົນໃດທີ່ຫນີຈາກສຽງຂອງຄວາມເປັນຕາຢ້ານກໍຈະຕົກລົງໄປໃນລຸມພາງນັ້ນ ແລະ
ຄົນທີ່ຂຶ້ນມາຈາກລຸມພາງນັ້ນກໍຈະຖືກຈັບໃນກັບດັກບ່ອງຢ້ຽມຂອງທ້ອງຟ້າຈະເປີດອອກ ແລະ ຖານຮາກຂອງແຜ່ນດິນໂລກຈະສັ່ນສະເທືອນ
[19]ແຜ່ນດິນໂລກຈະແຕກສະລາຍຈົນສິ້ນຊາກແຜ່ນດິນໂລກຈະແຕກອອກເປັນຕອນ
ແຜ່ນດິນໂລກຈະສັ່ນສະເທືອນຢ່າງຮຸນແຮງ[20]ແຜ່ນດິນໂລກຈະໂຊເຊເຫມືອນກັບຄົນເມົາ
ແລະມັນຈະໂຍກໄປຂ້າງຫລັງແລະຂ້າງຫນ້າເຫມືອນກັບຕູບຄວາມບາບຂອງໂລກກໍຫນັກຢູ່ເທິງໂລກ ແລະ ໂລກຈະລົ້ມລົງແລະບໍ່ລຸກຂຶ້ນອີກເລີຍ
[21]ເຫດການນັ້ນຈະເກີດຂຶ້ນໃນວັນທີ່ພຣະຢາເວຈະຊົງລົງໂທດບໍລິວານຂອງພວກທີ່ຢູ່ສູງເທິງທີ່ສູງ ແລະ
ບັນດາກະສັດຂອງແຜ່ນດິນໂລກເທິງໂລກນີ້[22]ພວກເຂົາຈະຖືກຮວມເຂົ້າດ້ວຍກັນເປັນພວກນັກໂທດໃນຄຸກໃຕ້ດິນ ແລະ ຈະຖືກຂັງໄວ້ໃນຄຸກ
ແລະຫລັງຈາກນັ້ນຫລາຍມື້ພວກເຂົາກໍຈະຖືກ ລົງໂທດ[23]ແລ້ວດວງຈັນຈະອົດສູ ແລະດວງອາທິດຈະຂາຍຫນ້າ
ເພາະພຣະຢາເວຈອມໂຍທາຈະຊົງຄອງຣາດເທິງພູເຂົາຊີໂອນແລະ ໃນກຸງເຢຣູສາເລັມ ແລະ ຕໍ່ຫນ້າພວກຜູ້ອາວຸໂສຂອງພຣະອົງດ້ວຍພຣະສິຣິ

# 25

[1]ຂ້າແຕ່ພຣະຢາເວພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍຂ້ານ້ອຍຈະຍົກຍ້ອງພຣະອົງຂ້ານ້ອຍຈະສັນລະເສີນພຣະນາມຂອງພຣະອົງ[2]ເພາະພຣະອົງໄດ້ຊົງເຮັດສິ່ງ
ເມືອງປ້ອມປາການເປັນທີ່ເພພັງເມືອງທີ່ປ້ອມຂອງພວກຄົນຕ່າງດ້າວບໍ່ເປັນເມືອງອີກຕໍ່ໄປ[3]ເພາະສະນັ້ນຊົນຊາດທີ່ເຂັ້ມແຂງຈະຖວາຍພຣະກຽດແດ່ພຣະອົງເມືອງຂອ

[4]ເພາະພຣະອົງຊົງເປັນທີ່ປອດໄພແກ່ຄົນທີ່ຍາກຈົນຊົງເປັນທີ່ກຳບັງແກ່ຄົນທີ່ຂັດສົນໃນຄວາມທຸກໃຈຂອງເຂົາທີ່ກຳບັງຈາກພາຍຸແລະຮົ່ມເງົາກັນຄວາມຮ້ອນເມື່ອລົມຫ
[6]ພຣະຢາເວຈອມໂຍທາຈະຊົງຈັດງານລ້ຽງແກ່ຊົນຊາດທັງຫລາຍເທິງພູເຂົານີ້ງານລ້ຽງເທິງທີ່ກຳບັງເຫລົ້ານັ້ນດ້ວຍສິ່ງຕ່າງໆທີ່ເຕັມດ້ວຍໄຂມັນເຫລົ້າອະງຸ່ນຢ່າງດີ
ແລະ
ຊົນນຸ້ມ[7]ພຣະອົງຈະຊົງທຳລາຍສິ່ງທີ່ປົກຄຸມເທິງຊົນຊາດທັງຫມົດເທິງພູເຂົານີ້ຜ້າຫົ່ມໃຍທີ່ປົກຄຸມບັນດາປະຊາຊົນ[8]ພຣະອົງຈະຊົງກືນຄວາມຕາຍຕະຫລອດໄປ
ແລະ
ພຣະຢາເວອົງພຣະຜູ້ເປັນເຈົ້າຈະຊົງເຊັດນ້ຳຕາຈາກທຸກໃບຫນ້າພຣະອົງຈະຊົງນຳຄວາມອັບອາຍຂອງຊົນຊາດຂອງພຣະອົງອອກໄປຈາກແຜ່ນດິນໂລກທັງຫມົດເພ
[9]ໃນມື້ນັ້ນເຂົາຈະກ່າວກັນວ່າ "ເບິ່ງເຖີດ ນີ້ຄືພຣະເຈົ້າຂອງພວກເຮົາພວກເຮົາໄດ້ລໍຖ້າພຣະອົງ
ແລະພຣະອົງຈະຊົງຊ່ວຍພວກເຮົາໃຫ້ລອດນີ້ຄືພຣະຢາເວພວກເຮົາໄດ້ລໍຖ້າພຣະອົງພວກເຮົາຈະຍິນດີແລະປິຕິໃນຄວາມລອດພົ້ນຂອງພຣະອົງ"[10]ເພາະມືພຣະຢາເ
ແລະໂມອາບຈະຖືກຢຽບຢ້ຳລົງໃນທີ່ຂອງເຂົາເຫມືອນກັບຟາງທີ່ຖືກຢຽບຢ້ຳລົງໃນລຸມທີ່ເຕັມດ້ວຍມູນສັດ
[11]ພວກເຂົາຈະກາງມືອອກໃນທ່າມກາງລຸມນັ້ນເຫມືອນກັບຄົນລອຍນ້ຳກາງມືຂອງເຂົາລອຍນ້ຳແຕ່ພຣະຢາເວຈະເຮັດໃຫ້ຄວາມຢິ່ງຍິ່ງຂອງພວກເຂົາຕົກຕ່ຳລົງທັງໆທີ່

 generated on Tue Jun 17 19:01:42 2025

26 [1]ໃນມື້ນັ້ນເຂົາຈະຮ້ອງເພງນີ້ໃນແຜ່ນດິນຢູດານ
ເຮົາມີເມືອງທີ່ເຂັ້ມແຂງເມືອງຫນຶ່ງພຣະເຈົ້າໄດ້ຊົງເຮັດໃຫ້ຄວາມລອດເປັນກຳແພງແລະແນວປ້ອງກັນຂອງເມືອງນັ້ນ[2]ຈົ່ງເປີດປະຕູເມືອງເພື່ອໃຫ້ຊົນຊາດທີ່ມັກທີ່ຮັກສ

[3]ຈິດໃຈທີ່ຍັງຄົງຢູ່ໃນພຣະອົງຈະຊົງປົກປ້ອງເຂົາໄວ້ໃນຄວາມສະຫງົບສຸກຢ່າງສົມບູນເພາະເຂົາວາງໃຈໃນພຣະອົງ[4]ຈົ່ງວາງໃຈໃນພຣະຢາເວຕະຫລອດໄປເພາະໃນພ
ພຣະຢາເວຊົງເປັນຫີນນິລັນ
[5]ເພາະພຣະອົງຈະຊົງເຮັດໃຫ້ພວກທີ່ດຳເນີນຊີວິດຢ່າງຢິ່ງຍິ່ງຕົກຕ່ຳລົງພຣະອົງຈະຊົງເຮັດໃຫ້ເມືອງທີ່ມີປ້ອມປາການລົດຕ່ຳລົງພຣະອົງຈະຊົງເຮັດໃຫ້ຕ່ຳລົງເຖິງພື້ນດິ
ພຣະອົງຈະຊົງເຮັດໃຫ້ເມືອງນັ້ນຕ່ຳລົງຈົນເຖິງຝຸ່ນດິນ[6]ເມືອງນັ້ນຈະຖືກຢຽບຢ້ຳລົງໂດຍຕີນຂອງຄົນຈົນແລະການຢຽບຂອງຄົນຂັດສົນ
[7]ທາງຂອງຄົນຊອບທຳກໍຜ່ານໄປໄດ້ດ້ວຍດີຂ້າແດ່ອົງຜູ້ຊົງຊອບທຳພຣະອົງຊົງເຮັດໃຫ້ທາງຂອງຄົນຊອບທຳຕົງໄປ[8]ແມ່ນແລ້ວ
ຂ້າແດ່ພຣະຢາເວຂ້າພຣະອົງທັງຫລາຍລໍຖ້າພຣະອົງໃນທາງແຫ່ງການພິພາກສາຂອງພຣະອົງພຣະນາມຂອງພຣະອົງແລະເປັນທີ່ລະນຶກຂອງພຣະອົງເປັນຄວາມ
[10]ຂໍຊົງສຳແດງພຣະກາຣຸນາແກ່ຄົນອາທຳ ແຕ່ເຂົາຈະບໍ່ຮຽນຮູ້ເຖິງຄວາມຊອບທຳເຂົາເຮັດການອາທຳໃນແຜ່ນດິນທ່ຽງທຳ
ແລະບໍ່ເຫັນພຣະສະງ່າງາມຂອງພຣະຢາເວ
[11]ຂ້າແດ່ພຣະຢາເວ
ມືຂອງພຣະອົງໄດ້ຊູຂຶ້ນແລ້ວແຕ່ພວກເຂົາກໍເບິ່ງບໍ່ເຫັນແຕ່ພວກເຂົາຈະເຫັນຄວາມຮ້ອນໃຈຂອງພຣະອົງທີ່ມີຕໍ່ຊົນຊາດນັ້ນແລະຖືກເຮັດໃຫ້ໄດ້ຮັບຄວາມອັບອາຍເພ
[13]ຂ້າແດ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍທັງຫລາຍພວກເຈົ້ານາຍຄົນອື່ນໆນອກເຫນືອຈາກພຣະອົງໄດ້ປົກຄອງເຫນືອຈາກພຣະອົງໄດ້ປົກຄອງເຫນືອພວກຂ້ານ້ອຍ
ແລະທຳລາຍພວກເຂົາ ແລະ ເຮັດໃຫ້ອານຸສະຫວັນທຸກຢ່າງຂອງພວກເຂົາພິນາດໄປ
[15]ພຣະອົງໄດ້ຊົງເພີ່ມພູນຊົນຊາດນັ້ນຂຶ້ນ
ຂ້າແດ່ພຣະຢາເວພຣະອົງໄດ້ຊົງເພີ່ມພູນຊົນຊາດນັ້ນຂຶ້ນພຣະອົງຊົງໄດ້ຮັບກຽດພຣະອົງໄດ້ຊົງຂະຫຍາຍເຂດແດນທຸກດ້ານຂອງແຜ່ນດິນນັ້ນອອກໄປ
[16]ຂ້າແດ່ພຣະຢາເວພວກເຂົາໄດ້ເບິ່ງທີ່ພຣະອົງໃນເວລາຍາກລຳບາກພວກເຂົາໄດ້ອະທິຖານສຽງແຜ່ວເບົາເມື່ອການຕີສອນຂອງພຣະອົງຢູ່ເທິງພວກເຂົາ[17]ຍິງທີ່ຖືພາໃ
[18]ພວກຂ້ານ້ອຍໄດ້ຖືພາພວກຂ້ານ້ອຍໄດ້ເຈັບປວດໃນການເກີດລູກແຕ່ມັນເປັນເຫມືອນກັບວ່າພວກຂ້ານ້ອຍໄດ້ເກີດແຕ່ລົມເທົ່ານັ້ນພວກຂ້ານ້ອຍບໍ່ໄດ້ນຳຄວາມລອດ
ແລະ ຜູ້ທີ່ອາໃສຢູ່ໃນໂລກນີ້ກໍບໍ່ໄດ້ເກີດ
[19]ພວກຄົນຕາຍຂອງພຣະອົງຈະມີຊີວິດອີກສົບຂອງພວກເຂົາຈະລຸກຂຶ້ນພວກເຈົ້າທີ່ອາໃສຢູ່ໃນຝຸ່ນດິນຈົ່ງຕື່ນຂຶ້ນແລະຮ້ອງເພງດ້ວຍຄວາມຊື່ນບານເພາະນ້ຳຄ້າງຂອ
ແຜ່ນດິນໂລກຈະນຳພວກຄົນຕາຍເປັນຂຶ້ນມາ
[20]ຈົ່ງໄປເຖີດຊົນຊາດຂອງຂ້າພະເຈົ້າເອີຍຈົ່ງເຂົ້າໄປໃນຫ້ອງຂອງພວກເຈົ້າແລະເປີດປະຕູ
ຈົ່ງເຊື່ອງຕົວຢູ່ຈັກຫນ້ອຍຫນຶ່ງຈົນກວ່າຄວາມໂກດຮ້າຍຈະຜ່ານໄປ[21]ເພາະເບິ່ງເຖີດພຣະຢາເວຈະອອກມາຈາກທີ່ຢູ່ຂອງພຣະອົງເພື່ອລົງໂທດຜູ້ທີ່ອາໃສຢູ່ໃນແຜ່ນດິນ
ແລະຈະບໍ່ປິດບັງຜູ້ທີ່ຖືກຂ້າຂອງມັນໄວ້ອີກຕໍ່ໄປ


generated on Tue Jun 17 19:01:42 2025

# 27

[1]ໃນມື້ນັ້ນ ພຣະຢາເວຈະຊົງລົງໂທດເລວີອາທັນຄືມັງກອນຮ້າຍທີ່ບິນຢູ່ນັ້ນ ດ້ວຍດາບທີ່ແຂງແກ່ງໃຫຍ່ ແລະຮ້າຍກາດ
ເລວີອາທັນຄືມັງກອນຮ້າຍທີ່ຂົດໂຕຢູ່ ແລະພຣະອົງຈະຊົງຂ້າສັດຮ້າຍທີ່ຢູ່ໃນທະເລ[2]ໃນມື້ນັ້ນ
ສວນອະງຸ່ນເອີຍຈົ່ງຮ້ອງວຽງເພງເຖິງສວນນັ້ນວ່າ[3]"ເຮົາຢາເວເປັນຜູ້ປົກປ້ອງສວນນັ້ນເຮົາຮົດນ້ຳໃຫ້ມັນທຸກເວລາເຮົາເຝົ້າດູແລມັນທັງກາງຄືນແລະກາງເວັນເພື່ອຈະບໍ່ໃ

[4]ໂອ ເຮົາບໍ່ໄດ້ຄຽດທີ່ມີພຸ່ມໄມ້ໜາມແລະພວກຕົ້ນໜາມ
ໃນການສູ້ຮົບເຮົາຈະກ້າວຍ່າງອອກໄປຕໍ່ສູ້ກັບພວກມັນເຮົາຈະເຜົາພວກມັນທັງຫມົດດ້ວຍກັນ[5]ເວັ້ນແຕ່ພວກມັນໄດ້ເຂົ້າໃຈເຖິງການປົກປ້ອງຂອງເຮົາໄວ້
ແລະສ້າງສັນຕິພາບກັບເຮົາໃຫ້ພວກມັນເຮັດສັນຕິພາບກັບເຮົາ
[6]ໃນມື້ນັ້ນທີ່ຈະມາເຖິງຢາໂຄບຈະຢັ່ງຮາກອິດສະຣາເອນຈະເບັ່ງບານແລະແຕກຫນໍ່ ແລະພວກເຂົາຈະເຮັດໃຫ້ພື້ນດິນເຕັມດ້ວຍຜົນ"
[7]ພຣະຢາເວໄດ້ໂຈມຕີຢາໂຄບແລະອິດສະຣາເອນເຫມືອນຢ່າງທີ່ພຣະອົງໄດ້ໂຈມຕີຊົນຊາດເຫລົ່ານັ້ນທີ່ໂຈມຕີພວກເຂົາບໍ?
ຢາໂຄບແລະອິດສະຣາເອນໄດ້ຖືກຂ້າເຫມືອນຢ່າງໃນການສັງຫານຊົນຊາດເຫລົ່ານັ້ນທີ່ພວກເຂົາໄດ້ຂ້າບໍ?[8]ເຄື່ອງມືແຫ່ງທີ່ພຣະອົງຊົງໃຊ້ຕໍ່ສູ້
ຄືການໄລ່ຢາໂຄບແລະອິດສະຣາເອນໄປ ພຣະອົງໄດ້ຊົງຂັບໄລ່ພວກເຂົາໄປດ້ວຍລົມຮຸນແຮງ ໃນວັນທີ່ມີລົມຕະວັນອອກ
[9]ເພາະສະນັ້ນໃນການເຮັດເຊັ່ນນີ້ຄວາມຊົ່ວຮ້າຍຂອງຢາໂຄບຈະຖືກລົບລ້າງອອກໄປ
ເພາະນີ້ຈະເປັນຜົນຢ່າງເຕັມທີ່ໃນການກຳຈັດຄວາມບາບຂອງເຂົາອອກໄປເມື່ອເຂົາຈະເຮັດໃຫ້ຫີນຂອງແທ່ນບູຊາທັງຫມົດເປັນເຫມືອນຫີນປູນແລະທຸບໃຫ້ແຕກເປັ
ແລະ ບໍ່ມີເສົາອາເຊຣາຫລືແທ່ນເຜົາເຄື່ອງຫອມຍັງຄົງຕັ້ງຢູ່ເລີຍ
[10]ເພາະເມືອງປ້ອມປາການກໍຮ້າງເປົ່າແລະທີ່ຢູ່ອາໃສກໍຮົກຮ້າງແລະຖືກຖິ້ມເຫມືອນຖິ່ນທຸກລະກັນດານ ລູກງົວຈະຫາກິນຢູ່ທີ່ນັ້ນ
ແລະມັນນອນລົງແລະກິນກິ່ງຂອງມັນຈົນຫມົດ[11]ເມື່ອກິ່ງເຫລົ່ານັ້ນຫ່ຽວແຫ້ງພວກມັນກໍຈະຖືກຫັກອອກໄປ
ພວກຜູ້ຍິງຈະມາແລະເອົາມັນໄປກໍໄຟ ເພາະນີ້ບໍ່ແມ່ນຊົນຊາດທີ່ເຂົ້າໃຈ ເພາະສະນັ້ນ ພະຜູ້ສ້າງຂອງພວກເຂົາຈະບໍ່ຊົງອີຕົນພວກເຂົາ
ແລະພະອົງຜູ້ຊົງສ້າງພວກເຂົາຈະບໍ່ມີເມດຕາຕໍ່ພວກເຂົາ
[12]ເມື່ອມາເຖິງວັນທີ່ພຣະຢາເວຈະຊົງນວດເຂົ້າຕັ້ງແຕ່ແມ່ນ້ຳເອີຟຣັດໄປຈົນເຖິງວາດີແຫ່ງເອຢິບ ແລະ ຊົນຊາດອິດສະຣາເອນເອີຍ ເຈົ້າ,
ຈະຖືກຮວບຮວມເຂົ້າມາເທື່ອລະຄົນ.[13]ໃນວັນນັ້ນ ແກໃຫຍ່ຈະຖືກເປົ່າ; ແລະພວກຄົນທີ່ກຳລັງພິນາດໃນແຜ່ນດິນອັດຊີເຣຍຈະມາ, ແລະ
ພວກທີ່ຖືກຂັບໄລ່ອອກໄປໃນແຜ່ນດິນເອຢິບຈະມາ, ພວກເຂົາຈະນະມັດສະການພຣະຢາເວເທິງພູເຂົາສັກສິດໃນກຸງເຢຣູຊາເລັມ.


generated on Tue Jun 17 19:01:42 2025

# 28

[1]ວິບັດແກ່ມົງກຸດດອກໄມ້ທີ່ຫນ້າພູມໃຈທີ່ພວກຂີ້ເມົາແຫ່ງອິດສະຣາເອນແຕ່ລະຄົນຕ່າງກໍສວມໃສ່ກັນ ແລະ
ແກ່ດອກໄມ້ທີ່ຫ່ຽວແຫ້ງຈາກຄວາມງາມສະງ່າຂອງມັນມົງກຸດດອກໄມ້ທີ່ວາງເທິງຍອດຮ່ວມພູທີ່ຂຽວອຸ່ມທຸມຂອງຄົນເຫລົ່ານັ້ນທີ່ຖືກຄອບງຳດ້ວຍເຫລົ້າອະງຸ່ນ[2]ເບິ່ງເ
ແລະເຫມືອນລົມພາຍຸແຫ່ງການທຳລາຍເຫມືອນກັບຝົນຊຸດສາດແລະນ້ຳທີ່ໄຫລບ່າ ແລະເຂົາຈະໂຍນມົງກຸດດອກໄມ້ແຕ່ລະອັນລົງໄປຍັງພື້ນດິນ

[3]ມົງກຸດດອກໄມ້ທີ່ຫນ້າພູມໃຈຂອງພວກຂີ້ເມົາແຫ່ງອິດສະຣາເອນຈະຖືກຢຽບຢ່ຳຢູ່ພາຍໃຕ້ຝ່າຕີນ[4]ດອກໄມ້ແຫ່ງຄວາມງາມສະງ່າຂອງເຂົາທີ່ກຳລັງຫ່ຽວແຫ້ງຢູ່ເທິ
[5]ໃນມື້ນັ້ນພຣະຢາເວຈອມໂຍທາຈະຊົງເປັນມົງກຸດສວຍງາມແລະເປັນມົງກຸດທີ່ງົດງາມແກ່ຄົນທີ່ເຫລືອຢູ່ຂອງຊົນຊາດຂອງພຣະອົງ[6]ຈະຊົງເປັນວິນຍານແຫ່ງຄວາມຍຸດ
ແລະ ຊົງເສີມກຳລັງແກ່ຄົນທີ່ຊະນະສັດຕູຂອງພວກເຂົາທີ່ປະຕູເມືອງ
[7]ບໍ່ພຽງແຕ່ຄົນເຫລົ່ານີ້ຈະຊວນເຊດ້ວຍເຫລົ້າອະງຸ່ນ ແລະຍັງໂຊເຊດ້ວຍເມໄຮດ້ວຍປະໂຣຫິດແລະຜູ້ເຜີຍຄຳສັ່ງກໍຊວນເຊດ້ວຍເມໄຮ
ແລະພວກເຂົາກໍຖືກຄອບງຳດ້ວຍເຫລົ້າອະງຸ່ນ
ພວກເຂົາໂຊເຊດ້ວຍເມໄຮເຮັດໃຫ້ສິ່ງໃສໃນນິມິດແລະເອັນອຽງໃນການຕັດສິນຄວາມ[8]ແທ້ຈິງແລ້ວໂຕະທຸກໂຕລ້ວນເຕັມດ້ວຍຮາກ
ຈຶ່ງບໍ່ມີທີ່ໃດສະອາດເລີຍ
[9]ເຂົາຈະສອນຄວາມຮູ້ໃຫ້ກັບໃຜ? ແລະເຂົາຈະອະທິບາຍຖ້ອຍຄຳໃຫ້ກັບໃຜ? ໃຫ້ກັບພວກທີ່ຫາເຊົານົມບໍຫລືພວກທີ່ຫາອອກຈາກອົກແມ່ບໍ?
[10]ເພາະຖ້ອຍຄຳນັ້ນຈະເປັນເຫມືອນກັບຕຄຳສັ່ງຊ້ອນຄຳສັ່ງຄຳສັ່ງຊ້ອນຄຳສັ່ງກົດບັນຍັດຊ້ອນກົດບັນຍັດກົດບັນຍັດຊ້ອນກົດບັນຍັດທີ່ນີ້ຫນ້ອຍຫນຶ່ງ
ແລະ ທີ່ນັ້ນອີກຫນ້ອຍຫນຶ່ງ
[11]ແທ້ຈິງເຂົາຈະເວົ້າກັບຊົນຊາດນີ້ດ້ວຍຮີມຝີປາກທີ່ມັກເຍາະເຍີ້ ແລະ
ດ້ວຍລີ້ນຂອງຄົນຕ່າງດ້າວ[12]ໃນສະໄຫມກ່ອນພຣະອົງກ່າວກັບພວກເຂົາວ່າ "ນີ້ເປັນການຢຸດພັກຈົ່ງໃຫ້ການຢຸດພັກແກ່ຄົນທີ່ເມື່ອຍລ້າ ແລະ
ນີ້ເປັນການເຮັດໃຫ້ສົດຊື່ນ" ແຕ່ພວກເຂົາຈະບໍ່ຟັງ
[13]ເພາະສະນັ້ນຂໍ້ຄຳສັ່ງຂອງພຣະຢາເວຈະເປັນເຊັ່ນນີ້ຕໍ່ພວກເຂົາຄືເປັນຄຳສັ່ງຊ້ອນຄຳສັ່ງຄຳສັ່ງຊ້ອນຄຳສັ່ງກົດບັນຍັດຊ້ອນກົດບັນຍັດກົດບັນຍັດຊ້ອນກົດບັນຍັດທີ່ນີ້
ແລະ ຈະແຕກຫັກຕິດບ່ວງດັກແລະຖືກຈັບໄປ
[14]ດັ່ງນັ້ນພວກເຈົ້າຜູ້ທີ່ມັກເຍາະເຍີ້ຈົ່ງຟັງຂໍ້ຄຳສັ່ງຂອງພຣະຢາເວເຈົ້າຜູ້ທີ່ປົກຄອງເຫນືອຊົນຊາດນີ້ທີ່ຢູ່ໃນກຸງເຢຣູຊາເລັມ[15]ເຫດການນີ້ເກີດຂຶ້ນເພາະພວກເຈົ້າກ່າວວ່
"ພວກເຮົາໄດ້ເຮັດຄຳສັນຍາກັບຄວາມຕາຍແລ້ວ ແລະ ພວກເຮົາໄດ້ເຮັດຂໍ້ຕົກລົງກັບແດນຄົນຕາຍ
ດັ່ງນັ້ນເມື່ອໄພພິບັດໄຫລບ່າລົງມາມັນຈະບໍ່ມາເຖິງພວກເຮົາເພາະພວກເຮົາໄດ້ເຮັດໃຫ້ການຕວະເປັນທີ່ລີ້ໄພຂອງເຮົາ
ແລະເອົາການຫລອກລວງເປັນທີ່ກຳບັງ"
[16]ເພາະສະນັ້ນພຣະຢາເວອົງພຣະຜູ້ເປັນເຈົ້າກ່າວວ່າ
"ເບິ່ງເຖີດເຮົາຈະວາງຫີນຖານຮາກໃນຊີໂອນຫີນທີ່ທົດສອບແລ້ວຫີນມຸມເອກທີ່ລ້ຳຄ່າຮາກຖານທີ່ຫມັ້ນຄົງຜູ້ໃດທີ່ເຊື່ອຈະບໍ່ໄດ້ຮັບຄວາມອັບອາຍ
[17]ເຮົາຈະເຮັດໃຫ້ຄວາມຍຸດຕິທຳເປັນໄມ້ວັດແລະຄວາມຊອບທຳເປັນສາຍດິ່ງລູກເຫັບຈະກວາດທີ່ລີ້ໄພແຫ່ງການຕວະອອກໄປແລະນ້ຳທ່ວມຈະໄຫບບ່າລົ້ນທີ່ລີ້ບລີ້ນັ
[18]ຄຳສັນຍາຂອງພວກເຈົ້າກັບຄວາມຕາຍຈະຖືກຍົກເລີກ ແລະ ຂໍ້ຕົກລົງກັບແດນຄົນຕາຍຈະບໍ່ຄົງຢູ່
ເມື່ອນ້ຳໄຫລແຮງຮາກໄຫລຜ່ານນ້ຳກໍຈະທ່ວມພວກເຈົ້າ[19]ເມື່ອໃດກໍຕາມທີ່ມັນໄຫລຜ່ານໄປ ມັນກໍຈະທ່ວມເຈົ້າ ມັນຈະຜ່ານໄປເຊົ້າແລ້ວເຊົ້າອີກ
ແລະ ມັນຈະມາທັງກາງເວັນແລະກາງຄືນເມື່ອໄດ້ເຂົ້າໃຈຖ້ອຍຄຳນັ້ນແລ້ວມັນກໍຈະເຮັດໃຫ້ຢ້ານກົວ
[20]ເພາະທີ່ນອນກໍສັ້ນເກີນໄປສຳຫລັບຄົນທີ່ຈະຢຽດຕົວເທິງນັ້ນ ແລະ
ຜ້າຫົ່ມກໍແຄບເກີນໄປສຳຫລັບເຂົາທີ່ຈະຫົ່ມຕົວເຂົາເອງໄດ້ຫມົດ"[21]ພຣະຢາເວຈະຊົງລຸກຂຶ້ນເຫມືອນທີ່ເທິງພູເຂົາເປຣາຊີມພຣະອົງຈະຊົງເຮັ້ງພຣະອົງເອງເຫມືອນໃ
ແລະ ການກະທຳວຽກທີ່ແປກປະຫລາດຂອງພຣະອົງ
[22]ເພາະສະນັ້ນຢ່າເຍາະເຍີ້ບໍ່ສະນັ້ນໂຊ່ລາມຂອງເຈົ້າຈະຮັດແນ່ນຂ້າພະເຈົ້າໄດ້ຍິນຈາກພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາເລື່ອງກົດຫມາຍແຫ່ງການທະລາຍ
[23]ຈົ່ງຕັ້ງໃຈແລະຟັງສຽງຂອງຂ້າພະເຈົ້າ[24]ຈົ່ງຕັ້ງໃຈແລະຟັງຖ້ອຍຄຳຂອງຂ້າພະເຈົ້າຊາວນາທີ່ໄຖນາທັງມື້ເພື່ອທີ່ຈະວ່ານເຂົາໄຖແຕ່ພື້ນດິນເທົ່ານັ້ນບໍ?
ເຂົາຈະຍັງຄົງເຮັດໃຫ້ດິນແຕກລະອຽດແລະຄາດທີ່ນາຕໍ່ໄປບໍ?
[25]ເມື່ອເຂົາໄດ້ຕຽມດິນແລ້ວເຂົາຈະບໍ່ວ່ານເມັດຜັກຊີຫມີ່ນວ່ານຜັກຊີປູກເຂົ້າສາລີເປັນແຖວ ແລະ ປູກເຂົ້າບາເລໃນທີ່ຂອງມັນ
ແລະປູກເຂົ້າສະເປໄວ້ຕາມຂອບບໍ?[26]ພຣະເຈົ້າຂອງເຂົາຊົງສອນເຂົາພຣະອົງຊົງສອນເຂົາຢ່າງສະຫລາດ
[27]ຍິ່ງກວ່ານັ້ນເມັດຂີ້ຫມີ່ນບໍ່ຖືກນວດດ້ວຍເລື່ອນນວດເຂົ້າຫລືໃຊ້ລໍ້ກວຽນກິ້ງທັບ ແຕ່ເຂົາຕີຂີ້ຫມີ່ນດ້ວຍໄມ້ຟອຍ ແລະ
ເຂົາທຸບດ້ວຍໄມ້ຕະບອງ[28]ເຂົ້າຖືກບົດເພື່ອເຮັດເປັນຂະຫນົມປັງແຕ່ໄມ້ຕ້ອງລະອຽດຈົນເກີນໄປ ແລະ ເຖິງແມ້ນວ່າລໍ້ຂອງກວຽນ ແລະ
ພວກມ້າຂອງເຂົາທັບມັນໃຫ້ແຕກພວກມ້າຂອງເຂົາກໍຢ່ຳມັນບໍ່ໄດ້
[29]ເລື່ອງນີ້ກໍມາຈາກພຣະຢາເວຈອມໂຍທາດ້ວຍຜູ້ຊົງອັດສະຈັນໃນການໃຫ້ຄຳປຶກສາແລະຊົງເປັນເລີດໃນພຣະປັນຍາ

29 [1]ວິບັດແກ່ເຢຣູຊາເລັມ ເຢຣູຊາເລັມເອີຍ
ເມືອງທີ່ກາວິດເຄີຍລ້ອມໄວ້ຈົ່ງເພີ່ມປີຕໍ່ປີຈົ່ງໃຫ້ມີງານເທດສະການລວນກັບມາອີກ[2]ແຕ່ເຮົາຈະລ້ອມເຢຣູຊາເລັມໄວ້ ແລະ
ເມືອງນັ້ນຈະໂສກເສົ້າແລະຄຳຄວນ ແລະ ເມືອງນັ້ນຈະເປັນເຫມືອນເຢຣູຊາເລັມ

[3]ເຮົາຈະຕັ້ງຄ່າຍເປັນວົງລ້ອມສູ້ຮົບກັບເຈົ້າແລະຈະລ້ອມຕໍ່ສູ້ເຈົ້າດ້ວຍຮົ້ວເຫລັກ ແລະ ເຮົາຈະຕັ້ງປ້ອມຂຶ້ນສູ້ກັບເຈົ້າ[4]ເຈົ້າຈະຖືກ
ເຮັດໃຫ້ຕົກຕ່ຳລົງ ແລະ ຈະເວົ້າຈາກພື້ນດິນຄຳເວົ້າຂອງເຈົ້າຈະມາຈາກເບື້ອງຕ່ຳຈາກຝຸ່ນດິນ
ສຽງຂອງເຈົ້າຈະເຫມືອນກັບຜີທີ່ອອກມາຈາກພື້ນດິນ ແລະ ຄຳເວົ້າຂອງເຈົ້າຈະແຜ່ວເບົາຈາກຝຸ່ນດິນ
[5]ຄົນລວງຫລາຍທີ່ເປັນພວກຜູ້ຮຸກຮານເຈົ້າຈະເປັນເຫມືອນຝຸ່ນດິນ ແລະ
ຝູງຊົນຂອງພວກທີ່ໂຫດຮ້າຍຈະເປັນເຫມືອນແກລົບທີ່ກະຈາຍໄປມັນຈະເກີດຂຶ້ນໃນທັນທີພຽງແປບດຽວ[6]ພຣະຢາເວຈອມໂຍທາຈະມາຫາເຈົ້າດ້ວຍຟ້າຮ້ອງດ້ວຍແ
ແລະດ້ວຍເປວໄຟທີ່ເຜົາ
[7]ມັນຈະເປັນເຫມືອນກັບຄວາມຝັນ
ນິມິດໃນຕອນກາງຄືນຄົນຫລວງຫລາຍຂອງຊົນຊາດທັງຫລາຍຈະຕໍ່ສູ້ກັບເຢຣູຊາເລັມແລະທີ່ກຳບັງເຂັ້ມແຂງຂອງເມືອງນັ້ນພວກເຂົາຈະສູ້ຮົບກັບເມືອງນັ້ນແລະບັນ
[9]ຈົ່ງເຮັດຕົວເອງໃຫ້ພິສະວົງ ແລະ
ຕົກຕະລຶງຈົ່ງເຮັດຕົວເອງໃຫ້ມືດບອດແລະເປັນຄົນຕາບອດຈົ່ງມຶນເມົາແຕ່ບໍ່ແມ່ນດ້ວຍເຫລົ້າອະງຸ່ນຈົ່ງໂຊເຊໄປແຕ່ບໍ່ແມ່ນດ້ວຍເມໄຮ[10]ເພາະພຣະຢາເວໄດ້ຊົງເທວີນ
ແລະ ພວກຜູ້ທຳນາຍພຣະອົງໄດ້ຊົງຄຸມຫົວຂອງພວກເຈົ້າແລ້ວ
[11]ການສຳແດງທັງຫມົດທີ່ໄດ້ມາເຖິງພວກເຈົ້າເປັນຖ້ອຍຄຳຂອງຫນັງສືທີ່ປິດພະນຶກໄວ້ຕໍ່ພວກເຈົ້າ
ທີ່ຄົນທັງຫລາຍຈະໃຫ້ແກ່ຄົນທີ່ອ່ານອອກແລະກ່າວວ່າ "ຈົ່ງອ່ານນີ້" ເຂົາກໍຈະກ່າວວ່າ "ເຮົາອ່ານບໍ່ໄດ້
ເພາະມັນຖືກປິດພະນຶກໄວ້"[12]ຖ້າຫນັງສືເລັ່ມນັ້ນໄດ້ໃຫ້ແກ່ຄົນທີ່ອ່ານບໍ່ອອກ ແລະກ່າວວ່າ "ຈົ່ງອ່ານນີ້"ເຂົາກໍຈະກ່າວວ່າ "ເຮົາອ່ານບໍ່ອອກ"
[13]ອົງພຣະຜູ້ເປັນເຈົ້າໄດ້ກ່າວວ່າ
"ຊົນຊາດນີ້ມາໃກ້ເຮົາດ້ວຍປາກຂອງພວກເຂົາແລະໃຫ້ກຽດເຮົາດ້ວຍຮີມຝີປາກຂອງພວກເຂົາແຕ່ໃຈຂອງພວກເຂົາຢູ່ຫ່າງໄກຈາກເຮົາກຽດທີ່ພວກເຂົາໃຫ້ແກ່ເຮົ
ເບິ່ງເຖີດ ເຮົາຈະລົງມືເຮັດສິ່ງມະຫັດສະຈັນທ່າມກາງຊົນຊາດນີ້ ອັດສະຈັນແລ້ວອັດສະຈັນອີກ ປັນຍາຂອງຄົນມີ
ປັນຍາຂອງພວກເຂົາຈະພິນາດໄປ ແລະຄວາມເຂົ້າໃຈຂອງຄົນທີ່ມີຄວາມເຂົ້າໃຈຈະຫາຍໄປ"
[15]ວິບັດແກ່ຄົນເຫລົ່ານັ້ນທີ່ເຊື່ອງແຜນງານຂອງພວກເຂົາໄວ້ລຶກໆ ຈາກພຣະຢາເວແລະການກະທຳຕ່າງໆ ຂອງພວກເຂົາຢູ່ໃນຄວາມມືດ
ພວກເຂົາກ່າວວ່າ "ໃຜຈະເຫັນເຮົາ ແລະໃຜຈະຮູ້ຈັກເຮົາ?"
[16]ພວກເຈົ້າເຮັດສິ່ງຕ່າງໆ ຫນ້າມືເປັນຫລັງມື ຈະຖືວ່າຊ່າງປັ້ນຫມໍ້ເປັນເຫມືອນກັບດິນຫນຽວບໍ
ເພື່ອວ່າສິ່ງທີ່ຖືກສ້າງຈະເວົ້າເຖິງເຂົາຜູ້ທີ່ສ້າງມັນຂຶ້ນມາວ່າ "ເຂົາບໍ່ໄດ້ສ້າງເຮົາ" ບໍ ສິ່ງທີ່ຖືກປັ້ນເວົ້າເຖິງເຂົາຜູ້ທີ່ປັ້ນມັນວ່າ
"ເຂົາບໍ່ມີຄວາມເຂົ້າໃຈ?"
[17]ໃນເວລາແປບດຽວ ເລບານອນຈະກາຍເປັນທົ່ງນາ ແລະທົ່ງນານັ້ນຈະກາຍເປັນປ່າ[18]ໃນມື້ນັ້ນ ຄົນຫູນວກຈະໄດ້ຍິນຖ້ອຍຄຳຂອງຫນັງສື
ແລະຕາຂອງຄົນ ຕາບອດຈະເບິ່ງເຫັນໃນທີ່ມືດທຶບ[19]ຄົນທີ່ຖືກບີບບັງຄັບຈະຊື່ນຊົມຍິນດີໃນພຣະຢາເວອີກຄັ້ງ ແລະຄົນຍາກຈົນ
ທ່າມກາງມະນຸດຈະຊື່ນຊົມຍິນດີໃນອົງບໍລິສຸດຂອງອິດສະຣາເອນ
[20]ເພາະຄົນໂຫດຮ້າຍຈະຫມົດໄປ ແລະຄົນມັກເຍາະເຍີ້ຈະຫາຍໄປ
ຄົນເຫລົ່ານັ້ນທຸກຄົນທີ່ຮັກໃນການເຮັດຊົ່ວຈະຖືກຕັດອອກ[21]ຜູ້ທີ່ເຮັດໃຫ້ຄົນຫນຶ່ງກາຍເປັນຜູ້ກະທຳຜິດດ້ວຍຄຳດຽວ
ພວກເຂົາວາງບ່ວງດັກຄົນທີ່ສະແຫວງຫາຄວາມຍຸດຕິທຳທີ່ປະຕູເມືອງແລະເຮັດໃຫ້ຄົນຊອບທຳຕົກຕ່ຳລົງດ້ວຍການຕວະທີ່ເປົ່າປະໂຫຍດ
[22]ເພາະສະນັ້ນ ພຣະຢາເວຜູ້ໄດ້ຊົງໄຖ່ອັບຣາຮາມ ພຣະຢາເວກ່າວກ່ຽວກັບເຊື້ອສາຍຂອງຢາໂຄບດັ່ງນີ້ວ່າ
"ຢາໂຄບຈະບໍ່ໄດ້ຮັບຄວາມອັບອາຍອີກຕໍ່ໄປ ແລະໃບຫນ້າຂອງເຂົາຈະບໍ່ຊີດລົງອີກຕໍ່ໄປ[23]ແຕ່ເມື່ອເຂົາເຫັນລູກຫລານຂອງເຂົາ
ຊຶ່ງເປັນຜົນງານແຫ່ງມືຂອງເຮົາ ພວກເຂົາຈະເຮັດໃຫ້ນາມຂອງເຮົາສັກສິດ ພວກເຂົາຈະເຮັດໃຫ້ນາມຂອງອົງບໍລິສຸດຂອງຢາໂຄບສັກສິດ
ແລະພວກເຂົາຈະຢືນໃນຄວາມຫນ້າເກງຂາມຂອງພຣະເຈົ້າແຫ່ງອິດສະຣາເອນ[24]ພວກຄົນທີ່ເຂົ້າໃຈຜິດໃນຈິດໃຈຈະມີ
ຄວາມເຂົ້າໃຈຫລາຍຂຶ້ນ ແລະພວກຄົນທີ່ມັກຈົ່ມກໍຈະຮຽນຄວາມຮູ້"


generated on Tue Jun 17 19:01:42 2025

30 [1]ວິບັດແກ່ລູກຫລານທີ່ກະບົດ, "ນີ້ຄືຄຳປະກາດຂອງພຣະຢາເວ. "ພວກເຂົາວາງແຜນຕ່າງໆ, ແຕ່ບໍ່ໄດ້ມາຈາກເຮົາ;
ພວກເຂົາເຮັດສັນຍາກັບຊົນຊາດອື່ນໆ, ແຕ່ພວກເຂົາບໍ່ໄດ້ຮັບການແນະນຳຈາກ ວິນຍານຂອງເຮົາ, ເພາະສະນັ້ນ
ພວກເຂົາຈຶ່ງເພີ່ມບາບເຂົ້າກັບບາບ.[2]ພວກເຂົາໄດ້ອອກເດີນທາງລົງໄປຍັງເອຢິບ, ແຕ່ບໍ່ໄດ້ບອກຂໍຄຳປຶກສາຂອງເຮົາ. ພວກເຂົາ
ສະແຫວງຫາການຄຸ້ມຄອງຈາກຟາໂລ ແລະ ຫາທີ່ກຳບັງໃຕ້ຮົ່ມເງົາຂອງເອຢິບ.

[3]ເພາະສະນັ້ນ ການຄຸ້ມຄອງຂອງຟາໂລຈະເປັນຄວາມອັບອາຍຂອງພວກເຈົ້າ, ແລະ
ທີ່ກຳບັງໃຕ້ຮົ່ມເງົາຂອງເອຢິບຈະເປັນຄວາມຂາຍຫນ້າຂອງພວກເຈົ້າ,[4]ເຖິງແມ່ນວ່າພວກເຈົ້ານາຍຂອງພວກເຂົາຢູ່ທີ່ໂຊອານ ແລະ
ບັນດາຜູ້ສົ່ງຂ່າວສານໄດ້ມາຍັງຮາເນັດ.[5]ພວກເຂົາທຸກຄົນຈະໄດ້ຮັບຄວາມອັບອາຍ ເພາະຊົນຊາດທີ່ບໍ່ສາມາດຊ່ວຍເຫລືອບໍ່ ໃຫ້ປະໂຫຍດເລີຍ,
ມີແຕ່ຄວາມອັບອາຍ ແລະ ຄົນຂາຍຫນ້າ."
[6]ຄຳປະກາດກ່ຽວກັບບັນດາສັດປ່າແຫ່ງເນເກຽບ ພວກເຂົາໄດ້ຂົນສັບສິນຂອງພວກເຂົາໄປເທິງຫລັງແບ້
ແລະຂົນສັບສິນບັດຂອງພວກເຂົາໄປເທິງໂຫນກອູດ ຜ່ານໄປຕາມແຜ່ນດິນທີ່ຍາກລຳບາກແລະອັນຕະລາຍ ທີ່ມີສິງໂຕຕົວເມຍແລະສິງໂຕ
ງູພິດແລະງູແມວເຊົາ ໄປຍັງຊົນຊາດທີ່ຊ່ວຍເຫລືອພວກເຂົາບໍ່ໄດ້[7]ເພາະຄວາມຊ່ວຍເຫລືອຂອງອີຢິບກໍໄຮ້ຄ່າ ເພາະສະນັ້ນ
ເຮົາຈຶ່ງໄດ້ຮ້ອງປະເທດນັ້ນວ່າຣາເຫັບຜູ້ທີ່ນັ່ງຊື່
[8]ບັດນີ້ ຈົ່ງໄປເຖີດ ຈົ່ງຂຽນລົງເທິງແຜ່ນຈາລຶກຕໍ່ຫນ້າພວກເຂົາ ແລະຈາລຶກໄວ້ເທິງຫນັງສືມ້ວນ
ເພື່ອວ່າມັນຈະຖືກເກັບຮັກສາໄວ້ເພື່ອເປັນພະຍານໃນເວລາທີ່ຈະມາເຖິງ[9]ເພາະຄົນເຫລົ່ານີ້ເປັນຊົນຊາດທີ່ກະບົດລູກຫລານທີ່ຕວະ
ລູກຫລານທີ່ບໍ່ຟັງຄຳສັ່ງສອນຂອງພຣະຢາເວ
[10]ພວກເຂົາກ່າວກັບພວກຫມໍດູວ່າ "ຢ່າເບິ່ງເລີຍ" ແລະກ່າວກັບພວກຜູ້ເຜີຍຂໍ້ຄຳສັ່ງວ່າ "ຢ່າເຜີຍຂໍ້ຄຳສັ່ງຄວາມຈິງຕໍ່ເຮົາເລີຍ
ຈົ່ງກ່າວຖ້ອຍຄຳທີ່ຍົກຍໍເຮົາຈົ່ງເຜີຍຂໍ້ຄຳສັ່ງພາບມາຍາ[11]ຈົ່ງຫັນໄປ ໃຫ້ພົ້ນທາງນີ້ ຈົ່ງຫັນໄປຈາກວິຖີນີ້
ຈົ່ງເຮັດໃຫ້ອົງບໍລິສຸດແຫ່ງອິດສະຣາເອນໄດ້ຊົງຢຸດກ່າວຕໍ່ຫນ້າພວກເຮົາ"
[12]ດ້ວຍເຫດນີ້ ອົງບໍລິສຸດແຫ່ງອິດສະຣາເອນຈຶ່ງກ່າວວ່າ "ເພາະພວກເຈົ້າປະຕິເສດ
ຖ້ອຍຄຳນີ້ແລະວາງໃຈໃນການບີບບັງຄັບແລການຫລອກລວງແລະພັກອາໃສສິ່ງນີ້[13]ເພາະສະນັ້ນຄວາມບາບນີ້ຈະເປັນເຫມືອນກັບສ່ວນທີ່ແຕກທີ່ພ້ອມຈະລົ້ມລົງມາຕໍ່
ເຫມືອນກັບຮອຍໂປ່ງອອກມາໃນກຳແພງສູງທີ່ຈະພັງລົງມາໃນທັນທີ ໃນເວລາແປບດຽວ"
[14]ພຣະອົງຈະຊົງເຮັດໃຫ້ມັນພັງເຫມືອນກັບເຄື່ອງໃຊ້ທີ່ແຕກຫັກຂອງຊ່າງປັ້ນຫມໍ້ ພຣະອົງຈະບໍ່ຊົງເກັບມັນໄວ້
ເພື່ອຈະບໍ່ໃຫ້ພົບເສດຊິ້ນສ່ວນຈັກອັນຫນຶ່ງທີ່ຈະຕັກໄຟຈາກຂ້າງເຕົາ ຫລືໃຊ້ຕັກນ້ຳຈາກບໍ່ເກັບນ້ຳໄດ້
[15]ເພາະນີ້ຄືສິ່ງພຣະຢາເວອົງພຣະຜູ້ເປັນເຈົ້າ ອົງບໍລິສຸດຂອງອິດສະຣາເອນກ່າວວ່າ
"ພວກເຈົ້າຈະປອດໄພໃນການຫັນກັບແລະການຢຸດພັກໃນຄວາມງຽບສະງົບແລະໃນຄວາມໄວ້ວາງໃຈຈະເປັນກຳລັງຂອງພວກເຈົ້າ
ແຕ່ພວກເຈົ້າກໍບໍ່ຍອມເຮັດຕາມ[16]ພວກເຈົ້າໄດ້ກ່າວວ່າ 'ບໍ່ເອົາ ເພາະເຮົາຈະຂີ່ມ້າຫນີໄປ' ເພາະສະນັ້ນ ພວກເຈົ້າກໍຈະຫນີໄປ ແລະວ່າ
'ພວກເຮົາຈະຂີ່ມ້າທີ່ໄວສຸດ' ເພາະສະນັ້ນ ພວກຄົນທີ່ໄລ່ຕາມພວກເຈົ້າກໍຈະໄວສຸດ
[17]ຄົນຫນຶ່ງພັນຄົນຈະຫນີໄປເພາະຄຳຂູ່ ຂອງຄົນໆດຽວ ເພາະຄຳຂູ່ຂອງຄົນຫ້າຄົນ
ພວກເຈົ້າຈະຫນີໄປຈົນຄົນທີ່ເຫລືອຢູ່ຂອງເຈົ້າຈະເປັນເຫມືອນກັບເສົາທຸງເທິງຍອດເຂົາ ຫລືເຫມືອນກັບທຸງເທິງເນີນເຂົາ"
[18]ແຕ່ພຣະຢາເວກຳລັງຊົງລໍຖ້າທີ່ຈະກະຣຸນາຕໍ່ພວກເຈົ້າ ເພາະສະນັ້ນ ພຣະອົງຈຶ່ງຊົງພ້ອມທີ່ຈະສຳແດງເມດຕາຕໍ່ພວກເຈົ້າ
ເພາະພຣະຢາເວຊົງເປັນພຣະເຈົ້າແຫ່ງຄວາມຍຸດຕິທຳ ທຸກຄົນທີ່ລໍຖ້າພຣະອົງກໍເປັນສຸກ[19]ເພາະຊົນຊາດຫນຶ່ງຈະອາໃສຢູ່ໃນຊີໂອນ
ໃນກຸງເຢຣູຊາເລັມ ແລະພວກເຈົ້າຈະບບໍ່ຮ້ອງໄຫ້ອີກຕໍ່ໄປ
ພຣະອົງຈະຊົງກະຣຸນາຕໍ່ສຽງຮ້ອງໄຫ້ຂອງພວກເຈົ້າຢ່າງແນ່ນອນເມື່ອພຣະອົງຊົງໄດ້ຍິນ ພຣະອົງຈະຊົງຕອບພວກເຈົ້າ
[20]ເຖິງແມ້ນວ່າພຣະຢາເວປະທານເຂົ້າຫນົມປັງແຫ່ງຄວາມຍາກລຳບາກແລະນ້ຳແຫ່ງຄວາມທຸກໃຈແກ່ພວກເຈົ້າ ແມ້ນສະນັ້ນ
ພະອາຈານຂອງພວກເຈົ້າຈະບໍ່ຊົງເຊື່ອງພຣະອົງເອງອີກຕໍ່ໄປ
ແຕ່ພວກເຈົ້າຈະເຫັນພະອາຈານຂອງພວກເຈົ້າດ້ວຍຕາຂອງພວກເຈົ້າເອງ[21]ເມື່ອພວກເຈົ້າຫັນໄປທາງຂວາ ຫລືເມື່ອພວກເຈົ້າຫັນໄປທາງຊ້າຍ
ຫູຂອງພວກເຈົ້າຈະໄດ້ຍິນຄຳຂ້າງຫລັງພວກເຈົ້າວ່າ "ນີ້ເປັນຫົນທາງ ຈົ່ງຍ່າງໃນທາງນີ້"
[22]ພວກເຈົ້າຈະເຮັດໃຫ້ບັນດາຮູບແກະສະລັກຊຸບເງິນຂອງພວກເຈົ້າ ແລະຮູບຫລໍ່ທອງຄຳຂອງພວກເຈົ້າເຊື່ອມຄວາມສັກສິດ
ພວກເຈົ້າຈະຂວ້າງພວກມັນຖິ້ມໄປເຫມືອນກັບຜ້າຊັບປະຈຳເດືອນ ພວກເຈົ້າຈະກ່າວຍກັບພວກມັນວ່າ "ໄປໃຫ້ພົ້ນຈາກທີ່ນີ້"
[23]ພຣະອົງຈະປະທານຝົນໃຫ້ກັບເມັດພືດທີ່ພວກເຈົ້າໄດ້ວ່ານເທິງດິນ ແລະອາຫານຈາກພື້ນດິນຢ່າງບໍລິບູນ ແລະພືດຜົນເຫລົ່ານັ້ນຈະອຸດົມສົມບູນ
ໃນມື້ນັ້ນຝູງງົວຂອງເຈົ້າຈະຫາກິນໃນທົ່ງຫຍ້າກວ້າງມໃຫຍ່[24]ບັນດາງົວແລະແບ້ທີ່ໄຖນາ ຈະກິນອາຫານຢ່າງດີ
[25]ເທິງພູເຂົາສູງທຸກລູກແລະເທິງເນີນເຂົາທຸກເນີນ ຈະມີລຳຫ້ວຍແລະລຳທານທີ່ມີນ້ຳໄຫລໃນມື້ທີ່ມີການເຂັ່ນຂ້າຄັ້ງໃຫຍ່
ເມື່ອຫໍຄອຍເຫລົ່ານັ້ນພັງລົງມາ[26]ແສງ ຂອງດວງຈັນຈະເປັນເຫມືອນກັບແສງຂອງດວງອາທິດ
ແລະແສງຂອງດວງອາທິດຈະສະຫວ່າງຂຶ້ນເປັນເຈັດເທົ່າ ເຫມືອນກັບແສງສະຫວ່າງຂອງເຈັດມື້
ພຣະຢາເວຈະພັນຮອຍແຜຂອງຊົນຊາດຂອງພຣະອົງແລະຊົງຮັກສາຮອຍຊ້ຳຂອງພວກເຂົາທີ່ພຣະອົງເຮັດໃຫ້ບາດເຈັບ
[27]ເບິ່ງເຖີດ ພຣະນາມຂອງພຣະຢາເວມາຈາກທີ່ໄກ ເຜົາຜານດ້ວຍໃຈຮ້າຍແລະດ້ວຍຄວັນຫນາທຶບ
ໃນໃຈຂອງພຣະອົງຈະເຕັມດ້ວຍຄວາມໃຈຮ້າຍ
ແລະຊິວຫາຂອງພຣະອົງເປັນເຫມືອນໄຟທີ່ເຜົາຜານ[28]ລົມຫາຍໃຈຂອງພຣະອົງຈະເປັນເຫມືອນກະແສນ້ຳແຮງຮາກທີ່ຖ້ວມທັບມາເຖິງຄໍ
ເພື່ອຟັດຮ່ອນຊົນຊາດທັງຫລາຍດ້ວຍຕະແກງຮ່ອນແຫ່ງການທຳລາຍ
ລົມພຫາຍໃຈຂອງພຣະອົງເປັນບັງທີ່ຂາກັນໄກຂອງຊົນຊາດທັງຫລາຍທີ່ເຮັດໃຫ້ພວກເຂົາຫລົງທາງໄປ
[29]ພວກເຈົ້າຈະມີບົດເພງເຫມືອນຢ່າງໃນຄືນທີ່ມີເທດສະການລັ້ຽງສັກສິດໄດ້ຈັດຂຶ້ນແລະມີໃຈຍິນດີໃນເຫມືອນຢ່າງທີ່ຄົນຫນຶ່ງໄດ້ຕາມສຽງຂະລຸ່ຍໄປຍັງພູເຂົາຂອງພ
ໄປຍັງຫີນແຫ່ງອິດສະຣາເອນ

30 ພຣະຢາເວຈະຊົງເຮັດໃຫ້ຄົນໄດ້ຍິນສຽງອັນຊົງພະລັງຂອງພຣະອົງ
ແລະຊົງເຮັດໃຫ້ເຫັນການຟາດຫູຂອງພຣະອົງລົງມາດ້ວຍຄວາມໂກດຮ້າຍຢ່າງ ຮຸນແຮງແລະດ້ວຍເປວໄຟ ດ້ວຍລົມພາຍຸ
ພາຍຸຝົນແລະລູກເຫັບ
31 ເພາະສຽງຂອງພຣະຢາເວຄົນອັດຊີເຣຍຈະຖືກເຮັດໃຫ້ກະແຈກກະຈາຍໄປ
ພຣະອົງຈະຊົງຕີພວກເຂົາດ້ວຍໄມ້ 32 ທຸກຈັງວະຂອງໄມ້ລຽວທີໃຊ້ລົງໂທດຊຶ່ງພຣະຢາເວຈະຊົງຫວດບົດພວກເຂົາຈະເຂົ້າກັນກັບສຽງດົນຕີຂອງກອງແລະພິນເຂົາຄູ່
ຂະນະທີພຣະອົງຊົງສູ້ຮົບແລະຕໍ່ສູ້ກັບພວກເຂົາ
33 ເພາະທີສໍາຫລັບເຜົາກໍໄດ້ຕຽມໄວ້ດົນແລ້ວ ແທ້ຈິງແລ້ວ ທີນັ້ນໄດ້ຖືກຕຽມໄວ້ສໍາຫລັບກະສັດ ແລະພຣະເຈົ້າຊົງເຮັດໃຫ້ມັນລຶກແລະກວ້າງ
ກອງນັ້ນກໍພ້ອມດ້ວຍໄຟແລະຟືນຫລວງຫລາຍ ລົມຫາຍໃຈແຫ່ງພຣະຢາເວເຫມືອນກັບຈະຈູດໄຟໃຫ້ລຸກຂຶ້ນ

 generated on Tue Jun 17 19:01:42 2025

# 31

[1]ວິບັດແກ່ພວກຄົນທີ່ລົງໄປຍັງອີຢິບເພື່ອຂໍຄວາມຊ່ວຍເຫລືອແລະພຶ່ງພາມ້າທັງຫລາຍ ແລະວາງໃຈໃນບັນດາລົດມ້າສຶກ (ເພາະມີຫລວງຫລາຍ)
ແລະວາງໃຈໃນພວກພົນມ້າ (ເພາະມີນັບບໍ່ຖ້ວນ)[2]ແຕ່ພວກເຂົາບໍ່ໄດ້ໃສ່ໃຈກັບອົງບໍລິສຸດຂອງອິດສະຣາເອນ
ອີກທັງພວກເຂົາກໍບໍ່ສະແຫວງຫາພຣະຢາເວເລີຍ ແຕ່ພຣະອົງຊົງສະຫລາດແລະພຣະອົງຈະຊົງນຳໄພພິບັດມາ
ແລະຈະບໍ່ຊົງຖອນຂໍ້ຄຳສັ່ງຂອງພຣະອົງ ພຣະອົງຈະຊົງລຸກຂຶ້ນຕໍ່ສູ້ກັບວົງວານທີ່ເຮັດຊົ່ວ
ແລະຕໍ່ສູ້ກັບພວກຜູ້ທີ່ຊ່ວຍເຫລືອຂອງພວກຄົນທີ່ເຮັດບາບ

[3]ເອຢິບເປັນມະນຸດ ບໍ່ແມ່ນພຣະເຈົ້າ, ມ້າທັງຫລາຍຂອງພວກເຂົາເປັນເລືອດເນື້ອ ແລະ ບໍ່ແມ່ນວິນຍານ. ເມື່ອພຣະຢາເວຊົງຢື່ນມືອອກ
ຄົນທີ່ຊ່ວຍເຫລືອກໍຈະລົ້ມ ແລະ ຄົນທີ່ໄດ້ຮັບການຊ່ວຍເຫລືອຈະລົ້ມລົງ; ທັງສອງກໍຈະພິນາດໄປດ້ວຍກັນ.
[4]ພຣະຢາເວກ່າວກັບຂ້ານ້ອຍດັ່ງນີ້ວ່າ "ເຫມືອນກັບສິງໂຕຫລືສິງໂຕຫນຸ່ມທີ່ ຄຳຣາມຢູ່ເຫນືອເຫຍື່ອຂອງມັນ
ເມື່ອພວກຜູ້ລ້ຽງແກະກຸ່ມຫນຶ່ງໄດ້ຖືກຮ້ອງໃຫ້ມາ ຕໍ່ສູ້ກັບມັນ ແຕ່ມັນກໍບໍ່ຫວັ່ນຢ້ານຕໍ່ສຽງຂອງພວກເຂົາ
ອີກທັງບໍ່ຄານຫນີໄປຈາກສຽງຂອງພວກເຂົາ ດັ່ງນັ້ນ ພຣະຢາເວຈອມໂຍທາຈະມາເພື່ອສູ້ຮົບເທິງພູເຂົາຊີໂອນ ເທິງເນີນເຂົານັ້ນ
[5]ເຫມືອນກັບນົກທີ່ບິນເປັນຝູງ ເພາະສະນັ້ນພຣະຢາເວຈອມໂຍທາຈະຊົງປົກປ້ອງກຸງເຢຣູຊາເລັມ
ພຣະອົງຈະຊົງປົກປ້ອງແລະຊ່ວຍຊີວິດຂະນະທີ່ພຣະອົງຜ່ານຂ້າມເມືອງນັ້ນແລະປົກປ້ອງເມືອງນັ້ນໄວ້[6]ປະຊາກອນອິດສະຣາເອນເອີຍ
ຈົ່ງກັບມາຫາພຣະອົງທີ່ພວກເຈົ້າໄດ້ຫັນໄປຈາກ
ພຣະອົງຢ່າງສິ້ນເຊີງ[7]ເພາະໃນມື້ນັ້ນແຕ່ລະຄົນຈະກຳຈັດຮູບເຄົາລົບເງິນແລະຮູບເຄົາຣົບທອງຄຳຂອງເຂົາທີ່ໄດ້ສ້າງດ້ວຍມືທີ່ເຕັມດ້ວຍບາບຂອງພວກເຈົ້າເອງ[8]ຄົນອັດ
ດາບທີ່ບໍ່ໄດ້ເຮັດໂດຍມະນຸດຈະລ້າງຜານເຂົາ ເຂົາຈະຫນີຈາກດາບນັ້ນ
ແລະພວກຄົນຫນຸ່ມຂອງເຂົາຈະຖືກບັງຄັບໃຫ້ເຮັດວຽກຫນັກ[9]ພວກເຂົາຈະສູນເສຍຄວາມຫມັ້ນໃຈໄປຫມົດສິ້ນ ເພາະຄວາມຢ້ານກົວ
ແລະພວກເຈົ້ານາຍຂອງເຂົາຈະຢ້ານເມື່ອເບິ່ງເຫັນທຸງແຫ່ງສົງຄາມຂອງພຣະຢາເວ ນີ້ເປັນຄຳປະກາດຂອງພຣະຢາເວ
ນີ້ເປັນຄຳປະກາດຂອງພຣະຢາເວ ຜູ້ທີ່ໄຟຂອງພຣະອົງຢູ່ໃນຊີໂອນ ແລະຜູ້ທີ່ເຕົາເຜົາຂອງພຣະອົງຢູ່ໃນກຸງເຢຣູຊາເລັມ"

 generated on Tue Jun 17 19:01:42 2025

# 32

[1]ເບິ່ງເຖີດກະສັດອົງຫນຶ່ງຈະຄອບຄອງດ້ວຍຄວາມຊອບທຳ ແລະ
ບັນດາເຈົ້ານາຍຈະປົກຄອງດ້ວຍຄວາມຍຸດຕິທຳ[2]ແຕ່ລະຄົນຈະເປັນເຫມືອນທີ່ກຳບັງຈາກກົມ ແລະ
ທີ່ຄຸ້ມກັນຈາກພາຍຸເຫມືອນກັບລຳທານນ້ຳທັງຫລາຍໃນທີ່ແຫ້ງແລ້ງເຫມືອນກັບຮົ່ມເງົາ
ຂອງຫີນໃຫຍ່ໃນແຜ່ນດິນທີ່ແຫ້ງແລ້ງ[3]ແລ້ວຕາຂອງພວກຄົນທີ່ເຫັນຈະບໍ່ມົວໄປແລະຫູຂອງພວກຄົນທີ່ໄດ້ຍິນຈະຟັງຢ່າງຕັ້ງໃຈ

[4]ຄົນທີ່ຫຸນຫັນພະລັນແລ່ນຈະຄິດຢ່າງຮອບຄອບດ້ວຍຄວາມເຂົ້າໃຈ
ແລະຄົນທີ່ຕິດອ່າງຈະເວົ້າຊັດຖ້ອຍຊັດຄຳແລະສະລານ[5]ຄົນໂງ່ຈະບໍ່ຖືກຮ້ອງກວ່າຄົນມີກຽດອີກຕໍ່ໄປ
ອີກທັງຄົນທີ່ຫລອກລວງກໍຈະບໍ່ໄດ້ຖືກຮ້ອງວ່າຄົນສຳຄັນອີກຕໍ່ໄປ[6]ເພາະຄົນໂງ່ເວົ້າຄວາມໂງ່ຈ້າ
ແລະໃຈຂອງເຂົາກໍວາງແຜນຊົ່ວຮ້າຍແລະການກະທຳອາທຳແລະເຂົາເວົ້າບໍ່ຖືກຕ້ອງກ່ຽວກັບພຣະຢາເວ ເຂົາເຮັດໃຫ້ຄົນທີ່ຫິວບໍ່ມີຫຍັງເລີຍ
ແລະເຂົາເຮັດໃຫ້ຄົນກະຫາຍຂາກນ້ຳດື່ມ
[7]ວິທີການທັງຫລາຍຂອງຄົນຫລອກລວງກໍຊົ່ວຮ້າຍເຂົາວາງແຜນອາທຳເພື່ອທຳລາຍ
ຄົນຈົນດ້ວຍການຕວະຕ່າງໆແມ້ນແຕ່ເມື່ອຄົນຈົນຄົນນັ້ນເວົ້າສິ່ງທີ່ຖືກຳຕ້ອງ[8]ແຕ່ຄົນທີ່ຊື່ຕົງເຮັດແຜນງານທີ່ຊື່ຕົງ ແລະ
ເພາະການກະທຳທີ່ຊື່ຕົງຂອງເຂົາແລ້ວເຂົາຈະຢືນຢັດຢູ່ໄດ້
[9]ພວກຜູ້ຍິງທີ່ຢູ່ຢ່າງສະບາຍເອີຍຈົ່ງລຸກຂຶ້ນ ແລະ
ຈົ່ງຟັງສຽງຂອງຂ້າພະເຈົ້າພວກລູກສາວທີ່ໄຮ້ກັງວົນຈົ່ງຟັງຂ້າພະເຈົ້າ[10]ເພາະໃນເວລາອີກປີປາຍໆຄວາມຫມັ້ນໃຈຂອງພວກເຈົ້າຈະຫມົດໄປພວກຜູ້ຍິງທີ່ໄຮ້ກັງວົນເອີ
ການເກັບພືດຜົນກໍຈະບໍ່ມາເຖິງ
[11]ພວກຜູ້ຍິງທີ່ຢູ່ຢ່າງສະບາຍເອີຍຈົ່ງຕົວສັ່ນ ຈົ່ງເຫນື່ອຍຍາກພວກຄົນທີ່ມີຄວາມຫມັ້ນໃຈຈົ່ງຖອດເສື້ອຜ້າທີ່ງົດງາມຂອງພວກເຈົ້າອອກ ແລະ
ເຮັດໃຫ້ຕົວພວກເຈົ້າເປືອຍເປົ່າຈົ່ງເອົາຜ້າກະສອບຄາດເອວພວກເຈົ້າໄວ້[12]ພວກເຈົ້າຈະຮ້ອງໃຫ້ຄຳຄວນເພາະໄຮ່ນາທີ່ແສນສຸກເພາະຕົ້ນອະງຸ່ນລູກດົກ[13]ແຜ່ນດິນຂອ
ແມ້ນແຕ່ໃນບ້ານເຮືອນທັງຫມົດທີ່ເຄີຍມ່ວນຊື່ນໃນເມືອງທີ່ເຣຮ່າ
[14]ເພາະພຣະຣາຊວັງຈະຖືກຖິ້ມເມືອງທີ່ມີຄົນຫນາແຫນ້ນກໍຈະຮ້າງເປົ່າເນີນເຂົາ ແລະ ຫໍຄອຍຈະກາຍເປັນຖ້ຳຕະຫລອດໄປ
ກາຍເປັນທີ່ເຮາຮ່າຂອງພວກແບ້ປ່າກາຍເປັນທົ່ງຫຍ້າຂອງຝູງສັດ[15]ຈົນກວ່າຈະຊົງເທພຣະວິນຍານຈາກເບື້ອງເທິງລົງມາເຫນືອພວກເຮົາ ແລະ
ຖິ່ນແຫ້ງແລ້ງກັນດານຈະກາຍເປັນໄຮ່ນາທີ່ອຸດົມສົມບູນ ແລະ ໄຮ່ນາທີ່ອຸດົມສົມບູນຈະຖືວ່າເປັນປ່າ
[16]ແລ້ວຄວາມຍຸດຕິທຳຈະອາໃສຢູ່ໃນຖິ່ນແຫ້ງແລ້ງກັນດານ ແລະ
ຄວາມຊອບທຳຈະອາໃສຢູ່ໃນທົ່ງນາທີ່ອຸດົມສົມບູນ[17]ຜົນງານຂອງຄວາມຊອບທຳຈະເປັນສັນຕິສຸກ ແລະ ຜົນຂອງຄວາມຊອບທຳ
ຄືຄວາມງຽບສະຫງົບແລະຄວາມຫມັ້ນໃຈຕະຫລອດໄປ[18]ຊົນຊາດຂອງຂ້າພະເຈົ້າຈະອາໃສໃນທີ່ພັກອາໃສດ້ວຍຄວາມສະຫງົບສຸກໃນບ້ານເຮືອນທີ່ປອດໄພແລະໃນທີ່ພ
[19]ແຕ່ເຖິງແມ້ນວ່າມີລູກເຫັບຕົກແລະປ່າຖືກທຳລາຍໄປ
ແລະເມືອງກໍພິນາດໄປຈົນສິ້ນຊາກ[20]ພວກເຈົ້າທີ່ຫວ່ານພືດຢູ່ແຄມລະທານນ້ຳທຸກແຫ່ງກໍຈະເປັນສຸກ
ພວກເຈົ້າທີ່ປ່ອຍງົວແລະແບ້ຂອງພວກເຈົ້າອອກໄປຫາກິນ

33 [1]ວິບັດແກ່ເຈົ້າ, ຜູ້ທຳລາຍທີ່ບໍ່ເຄີຍຖືກທຳລາຍ! ວິບັດແກ່ຄົນທໍລະຍົດທີ່ພວກເຂົາບໍ່ເຄີຍຖືກທໍລະຍົດ! ເມື່ອເຈົ້າຢຸດທຳລາຍ,
ເຈົ້າກໍ່ຈະຖືກທຳລາຍ, ເມື່ອເຈົ້າຢຸດທໍລະຍົດ ພວກເຂົາກໍ່ຈະທໍລະຍົດເຈົ້າ.

[2]ຂ້າແດ່ພຣະເຈົ້າຢາເວ, ຂໍຊົງໂຜດເມດຕາຕໍ່ຂ້ານ້ອຍທັງຫລາຍ; ພວກຂ້ານ້ອຍລໍຖ້າພຣະອົງ; ຂໍຊົງເປັນແຂນໃຫ້ພວກຂ້ານ້ອຍໃນທຸກໆເຊົ້າ,
ຂໍຊົງເປັນຄວາມລອດພົ້ນຂອງຂ້ານ້ອຍໃນເວລາຍາກລຳບາກ.
[3]ເມື່ອມີສຽງດັງສະຫນັ່ນ ຊົນຊາດທັງຫລາຍກໍ່ຫນີໄປ, ເມື່ອພຣະອົງຊົງລຸກຂຶ້ນ, ຊົນຊາດທັງຫລາຍກໍ່ກະແຈກກະຈາຍໄປ.
[4]ຊັບສິນທີ່ມີຢູ່ຂອງພວກເຈົ້າຖືກນຳມາຮວມກັນຄືກັບຮວບຮວມຝູງຕັກກະແຕນ; ຄົນທັງຫລາຍກໍ່ຈະໂດດຂຸບມັນຄືກັບຝູງຕັກກະແຕນໂດດ.
[5]ພຣະຢາເວ ຊົງເປັນທີ່ຍົກຍໍ. ພຣະອົງຊົງປະທັບໃນທີ່ສູງສຸດ. ພຣະອົງຈະຊົງເຮັດໃຫ້ ຊີໂອນ ເຕັມໄປດ້ວຍຄວາມຍຸດຕິທຳ ແລະ ຄວາມຊອບທຳ.
[6]ພຣະອົງຈະຊົງເປັນຄວາມອຸດົມສົມບູນໃນເວລາຂອງພວກເຈົ້າ, ຊົງເປັນຄວາມລອດພົ້ນ, ສະຕິປັນຍາ, ແລະຄວາມຮອບຮູ້;
ຄວາມຢຳເກງພຣະເຈົ້າແມ່ນຊັບສົມບັດຂອງເຂົາ.
[7]ເບິ່ງເຖີດ, ຄະນະທູດຂອງພວກເຂົາຮ້ອງໄຫ້ຢູ່ຕາມທາງ; ແລະ ພວກນັກການທູດທີ່ຫວັງໃຫ້ມີສັນຕິພາບກໍ່ຮ້ອງໄຫ້ຢ່າງຂົມຂື່ນ.
[8]ທາງຫລວງທັງຫລາຍກໍ່ວ່າງເປົ່າ; ບໍ່ມີພວກຄົນເດີນທາງອີກເລີຍ ພັນທະສັນຍາຕ່າງໆ ກໍ່ຖືກຫັກລົງ, ພວກພະຍານກໍ່ຖືກດູຖູກ,
ແລະມວນມະນຸດກໍ່ບໍ່ໄດ້ຮັບການນັບຖື.
[9]ແຜ່ນດິນນັ້ນກໍ່ໂສກເສົ້າ ແລະ ຫ່ຽວແຫ້ງໄປ; ເລບານອນກໍ່ອັບອາຍແລະຫ່ຽວແຫ້ງໄປ; ຊາໂຣນ ກໍ່ເປັນດັ່ງຖິ່ນແຫ້ງແລ້ງ; ແລະ ບາຊານ ແລະ
ກາເມນ ໃບໄມ້ກໍ່ຫລົ່ນລົງຈາກຕົ້ນຫມົດ.
[10]ພຣະເຈົ້າຢາເວຊົງກ່າວວ່າ, "ບັດນີ້ເຮົາຈະລຸກຂຶ້ນ; ບັດນີ້ເຮົາຈະໄດ້ຮັບການເຊີດຊູ; ບັດນີ້ເຮົາຈະໄດ້ຮັບການຍົກຍ້ອງ.
[11]ພວກເຈົ້າຖືພາແຕ່ຂີ້ແກບ ແລະພວກເຈົ້າກໍ່ອອກລູກມາເປັນຕໍເຂົ້າ; ລົມຫາຍໃຈຂອງພວກເຈົ້າເປັນໄຟທີ່ຈະເຜົາຜານພວກເຈົ້າ.
[12]ພວກປະຊາຊົນຈະຖືກເຜົາເປັນປູນຂາວ, ຄືກັບຝຸ່ມໄມ້ຫນາມທີ່ຖືກຕັດລົງ ແລະ ຖືກເຜົາໄຟ.
[13]ພວກເຈົ້າທີ່ຢູ່ຫ່າງໄກ, ຈົ່ງຟັງສິ່ງທີ່ເຮົາໄດ້ເຮັດແລ້ວ; ແລະ, ພວກເຈົ້າທີ່ຢູ່ໃກ້, ຈົ່ງຮັບຮູ້ເຖິງອຳນາດຂອງເຮົາ". [14]ພວກຄົນບາບໃນ ຊີໂອນ
ຢ້ານກົວ; ຄວາມຢ້ານກົວໄດ້ຄອບງຳພວກຄົນທີ່ຊົ່ວຮ້າຍ. ຜູ້ໃດໃນພວກເຮົາຢູ່ກັບໄຟທີ່ຮ້ອນແຮງໄດ້?
ຜູ້ໃດໃນພວກເຮົາຢູ່ກັບການເຜົາໄຫມ້ໄດ້ຕະຫລອດໄປເປັນນິດ?
[15]ຄົນທີ່ຍ່າງດ້ວຍຄວາມຊອບທຳ ແລະ ເວົ້າຢ່າງຊື່ສັດ; ຄົນທີ່ດູຫມິ່ນ ຜົນປະໂຫຍດທີ່ໄດ້ຈາການກົດຂີ່ຂູດຮີດ, ຜູ້ຈະປະຕິເສດທີ່ຈະຮັບສິນບົນ,
ຜູ້ທີ່ບໍ່ໄດ້ວາງແຜນການກະທຳສິ່ງຜິດທີ່ຮ້າຍແຮງ, ແລະ ບໍ່ເບິ່ງຄວາມຊົ່ວຮ້າຍ. [16]ເຂົາຈະສ້າງເຮືອນຂອງເຂົາເທິງບ່ອນສູງ;
ບ່ອນປ້ອງກັນຂອງເຂົາຈະເປັນປ້ອມປະການຫີນ, ອາຫານແລະນ້ຳຂອງເຂົາຈະມີຢ່າງແນ່ນອນ.
[17]ດວງຕາຂອງພວກເຈົ້າຈະເຫັນກະສັດຜູ້ຊົງສະງ່າງາມ; ພວກເຂົາຈະເຫັນແຜ່ນດິນທີ່ກວ້າງຂວາງ.
[18]ຫົວໃຈຂອງເຈົ້າຈະລະລຶກເຖິງຄວາມຢ້ານກົວນັ້ນ; ນັກຂຽນຢູ່ບ່ອນໃດ, ຄົນທີ່ຊັ່ງຈຳນວນເງິນຢູ່ບ່ອນໃດ?
ຄົນນັບຈຳນວນຫໍຄອຍເຫລົ່ານັ້ນຢູ່ບ່ອນໃດ? [19]ພວກເຈົ້າຈະບໍ່ໄດ້ເຫັນຊົນຊາດທີ່ເປັນສັດຕູອີກຕໍ່ໄປ, ຊົນຊາດທີ່ມີພາສາແປກໆອອກໄປ,
ຜູ້ທີ່ພວກເຈົ້າຟັງບໍ່ເຂົ້າໃຈ.
[20]ຈົ່ງເບິ່ງ ທີ່ຊີໂອນ, ເມືອງແຫ່ງເທດສະການງານລ້ຽງຂອງພວກເຮົາ; ດວງຕາຂອງເຈົ້າຈະເຫັນເມືອງເຢຣູຊາເລັມ ເປັນບ່ອນອາໃສທີ່ສະງົບ,
ຈະບໍ່ມີການຍ້າຍຜ້າເຕັ້ນອີກຕໍ່ໄປ, ຫລັກສຽບຈະບໍ່ຖືກຖອນຂຶ້ນມາ ອີກທັງຈະບໍ່ມີເຊືອກຂອງຜ້າເຕັ້ນເສັ້ນໃດທີ່ຂາດເລີຍ. [21]ແຕ່ພຣະຢາເວ
ຜູ້ຊົງສະງ່າງາມຈະສະຖິດກັບເຮົາ ໃນທີ່ເຊິ່ງມີແມ່ນ້ຳລຳທານອັນກວ້າງໃຫຍ່, ໃນສະຖານທີ່ຂອງແມ່ນ້ຳ ແລະ ສາຍນ້ຳ ທີ່ກວ້າງໃຫຍ່. ຈະບໍ່ມີ
ເຮືອຮົບທີ່ຕິດກັບທະເລສາມາດເດີນທາງໄປໄດ້, ແລະ ບໍ່ມີ ເຮືອຮົບລຳໃຫຍ່ ລຳ ໃດຈະແລ່ນຜ່ານໄປ.
[22]ເພາະພຣະຢາເວ ຊົງເປັນຜູ້ພິພາກສາຂອງພວກເຮົາ, ພຣະຢາເວ ຊົງເປັນຜູ້ບັນຍັດກົດຫມາຍຂອງພວກເຮົາ,
ເພາະພຣະຢາເວຊົງເປັນກະສັດຂອງພວກເຮົາ; ພຣະອົງຈະຊົງຊ່ວຍພວກເຮົາໃຫ້ລອດພົ້ນ.
[23]ເຊືອກກາງຜ້າໃບເຮືອຂອງພວກເຈົ້າກໍ່ຍານ; ເຊືອກເຫລົ່ານັ້ນບໍ່ສາມາດຍຶດເສົາກະໂດງ; ຂອງເຮືອໃຫ້ຢູ່ໃນບ່ອນຂອງມັນໄດ້;
ເມື່ອມີການແບ່ງສັບສົມບັດທີ່ຍຶດມາຢ່າງຫລວງຫລາຍ, ຄົນຂາພິການກໍ່ຈະລາກຂອງທີ່ຍຶດມານັ້ນໄປໄດ້. [24]ພວກຊາວເມືອງຈະບໍ່ເວົ້າວ່າ
"ຂ້ອຍປ່ວຍໃຂ້ຢູ່" ປະຊາຊົນທີ່ອາໄສຢູ່ທີ່ນັ້ນຈະໄດ້ຮັບການອະໄພໃຫ້ກັບຄວາມຜິດບາບຂອງເຂົາ.

34 [1]ປະຊາຊາດທັງຫລາຍເອີຍ, ຈົ່ງເຂົ້າມາໃກ້, ແລະຟັງ; ຊົນຊາດທັງຫລາຍເອີຍ, ຈົ່ງຕັ້ງໃຈຟັງ! ແຜ່ນດິນໂລກ ແລະ ຊັບພະສິ່ງໃນນັ້ນ,
ຕ້ອງຟັງ, ໂລກ ແລະ ທຸກສິ່ງທີ່ມາຈາກໂລກ.[2]ເພາະພຣະຢາເວ ຊົງໂກດຮ້າຍແກ່ປະຊາຊາດທັງຫມົດ, ແລະ
ຊົງລົງໂທດຕໍ່ກອງທັບທັງຫມົດຂອງພວກເຂົາ, ພຣະອົງຊົງທຳລາຍພວກເຂົາຈົນສິ້ນ, ພຣະອົງໄດ້ມອບພວກເຂົາໃຫ້ແກ່ການຂ້າຟັນ.

[3]ຊາກສົບຂອງພວກເຂົາຈະຖືກແກວ່ງອອກໄປ. ກິ່ນຂອງຊາກສົບຈະເຫມັນປົກຄຸມທົ່ວທຸກຫົນທຸກແຫ່ງ; ແລະ
ພູເຂົາທັງຫລາຍຈະນອງເຕັມໄປດ້ວຍເລືອດຂອງພວກເຂົາ.[4]ດວງດາວທັງຫມົດເທິງທ້ອງຟ້າຈະຫາຍໄປ, ແລະ
ທ້ອງຟ້າຈະຖືກມ້ວນຄືກັບຫນັງສືມ້ວນ, ແລະ ດວງດາວທັງຫມົດຈະຈາງຫາຍໄປ, ຄືກັບໃບທີ່ຫລົ່ນລົງຈາກເຄືອຫມາກອາງຸ່ນ, ແລະ
ຄືກັບຫນ່ວຍຫມາກເດື່ອທີ່ສຸກຫລົ່ນລົງຈາກຕົ້ນ.
[5]ເພາະເມື່ອດາບຂອງເຮົາຈະດື່ມຈົນອີ່ມໃນສະຫວັນແລ້ວ; ເບິ່ງແມ່ະ, ບັດນີ້ມັນຈະຕົກລົງມາຍັງ ເອໂດມ,
ມາຍັງຊົນຊາດທີ່ເຮົາໄດ້ກຳນົດໄວ້ເພື່ອການທຳລາຍ.[6]ດາບຂອງພຣະຢາເວ ຈະຈຸ່ມດ້ວຍເລືອດ ແລະ ອາບດ້ວຍໄຂມັນ,
ເຊິ່ງຈຸ່ມດ້ວຍເລືອດຂອງບັນດາລູກແກະ ແລະ ແບ້, ອາບດ້ວຍໄຂມັນຂອງໄຕ ຂອງແກະໂຕຜູ້, ເພາະພຣະພຣະຢາເວ ມີການຖວາຍບູຊານີ້ໃນ
ເມືອງໂບຊະຣາ ແລະ ການສັງຫານຄັ້ງໃຫຍ່ຈະເກີດໃນແຜ່ນດິນ ເອໂດມ.
[7]ງົວປ່າທັງຫລາຍຈະຖືກຂ້າພ້ອມກັນກັບພວກຂອງມັນ, ແລະ ງົວຫນຸ່ມກໍຈະຖືກຂ້າພ້ອມກັນກັບງົວແກ່ກວ່າ.
ແຜ່ນດິນຂອງພວກເຂົາຈະເຕັມໄປດ້ວຍເລືອດ, ແລະ ດິນຂອງພວກເຂົາຈະປຽກຊຸ່ມໄປດ້ວຍໄຂມັນ.
[8]ເພາະມັນຈະເປັນວັນແຫ່ງການແກ້ແຄ້ນຂອງພຣະຢາເວ ແລະ ປີທີ່ພຣະອົງຈະຕອບແທນພວກເຂົາຍ້ອນເຫດຜົນຂອງ ຊີໂອນ.
[9]ແມ່ນ້ຳທັງຫລາຍຂອງ ເອໂດມ ຈະກາຍເປັນຢາງຫມາຕອຍ, ດິນຈະກາຍເປັນມາດ, ແລະ ແຜ່ນດິນຈະເກີດໄຟໄຫມ້ລຸກຢູ່.
[10]ມັນຈະລຸກໄຫມ້ທັງເວັນແລະທັງຄືນ; ຄວັນຂອງມັນຈະລອຍຂຶ້ນຕະຫລອດໄປ; ມັນຈະເປັນແຜ່ນດິນທີ່ວ່າງເປົ່າຢູ່ທຸກຍຸກທຸກສະໄຫມ;
ຈະບໍ່ມີໃຜຜ່ານໄປບ່ອນນັ້ນຕະຫລອດໄປເປັນນິດ.
[11]ແຕ່ບັນດານົກປ່າ ແລະ ສັດປ່າຈະອາໄສຢູ່ບ່ອນນັ້ນ, ນົກເຂົາ ແລະ ກາ ຈະສ້າງຮັງຂອງພວກມັນໃນນັ້ນ,
ພຣະອົງຈະດຶງສາຍແທກເສັ້ນທາງແຫ່ງຄວາມພິນາດ ແລະ ສາຍພານແຫ່ງການທຳລາຍ.
[12]ບັນດາຜູ້ມີກຽດຂອງມັນຈະບໍ່ມີຫຍັງເຫລືອເລີຍທີ່ຈະເອີ້ນວ່າອານາຈັກ, ແລະບັນດາເຈົ້ານາຍຂອງທີ່ນັ້ນທັງຫມົດຈະບໍ່ມີອີກເລີຍ.
[13]ຕົ້ນຫນາມຈະປົ່ງຂຶ້ນຕາມພະຣາຊວັງຂອງບ່ອນນັ້ນ, ເຄືອຕຳແຍແລະເຄືອກະຊັບຈະເກີດອ້ອມຮອບປ້ອມປາການ,
ມັນຈະເປັນບ່ອນຢູ່ຂອງຫມາປ່າ ແລະ ເປັນບ່ອນຂອງນົກກະຈອກເທດ.[14]ພວກສັດປ່າ ແລະ ຫມາຈິ້ງຈອກຈະມາພົບກັນບ່ອນນັ້ນ, ແລະ
ພວກແບ້ປ່າຈະຮ້ອງຫາກັນ. ພວກສັດທີ່ຫາກິນຕອນກາງຄືນຈະຢູ່ທີ່ນັ້ນ ແລະ ຫາບ່ອນອາໄສສຳລັບພວກມັນເອງ.
[15]ນົກເຄົ້າຈະເຮັດຮັງຟັກໄຂ່ອອກລູກ, ແລະ ລ້ຽງລູກຂອງມັນຢູ່ບ່ອນນັ້ນ. ແມ່ນແລ້ວ, ພວກແຮ້ງຈະລວມໂຕກັນຢູ່ບ່ອນນັ້ນ,
ຕ່າງກໍຢູ່ກັບຄູ່ຂອງມັນ.
[16]ຈົ່ງຄົ້ນຫາຫນັງສືມ້ວນຂອງພຣະຢາເວ; ບໍ່ມີຈັກໂຕດຽວໃນພວກມັນເຫລົ່ານີ້ຈະຫາຍໄປ. ບໍ່ມີໂຕໃດຈະຂາດຄູ່;
ເພາະພຣະໂອດຂອງພຣະອົງໄດ້ຊົງບັນຊາໄວ້, ແລະພຣະວິນຍານຂອງພຣະອົງກໍຊົງຮວບຮວມພວກມັນໄວ້.
[17]ພຣະອົງຊົງຈັບສະຫລາກບ່ອນຕ່າງໆ ໃຫ້ກັບພວກມັນ, ແລະ ພຣະຫັດຂອງພຣະອົງກໍໄດ້ວັດແທກໃຫ້ກັບພວກມັນດ້ວຍເຊືອກແທກ.
ພວກມັນຈະໄດ້ກຳມະສິດຕະຫລອດໄປ; ພວກມັນຈະຢູ່ອາໄສຢູ່ບ່ອນນັ້ນທຸກຍຸກທຸກສະໄຫມ.

35 [1]ຖິ່ນທຸລະກັນດານ ແລະ ອາຣາບາຈະຍິນດີ; ແລະ ທະເລຊາຍຈະປິຕິຍິນດີ ເບັ່ງບານ ເຫມືອນດັ່ງດອກກຸຫລາບ.
ມັນຈະອອກດອກຢ່າງອຸດົມສົມບູນ,[2]ປິຕິຍິນດີດ້ວຍຄວາມເບີກບານມ່ວນຊື່ນ ແລະ ຮ້ອງເພງ;
ມັນຈະໄດ້ຮັບສະຫງ່າລາສີຂອງເລບານອນທັງຄວາມສວຍງາມຕາ, ຂອງກາເມນ ແລະ ຊາໂຣນ; ພວກເຂົາຈະເຫັນລັດສະຫມີຂອງພຣະຢາເວ,
ແລະ ພຣະສະຫງ່າລາສີຂອງພຣະເຈົ້າຂອງພວກເຮົາ.

[3]ຈົ່ງເສີມກຳລັງແກ່ມືທີ່ອ່ອນແຮງ, ແລະ ຈົ່ງເຮັດໃຫ້ຫົວເຂົ່າທີ່ສັ່ນນັ້ນໃຫ້ຫມັ້ນຄົງ.[4]ຈົ່ງເວົ້າກັບຄົນທີ່ມີຈິດໃຈຢ້ານກົວວ່າ, "ຈົ່ງເຂັ້ມແຂງເຖີດ,
ຢ່າຢ້ານເລີຍ! ເບິ່ງແມ່ພຣະເຈົ້າຂອງພວກເຈົ້າຈະມາດ້ວຍການແກ້ແຄ້ນ, ດ້ວຍການຕອບແທນຂອງພຣະເຈົ້າ.
ພຣະອົງຈະສະເດັດມາແລະຊ່ວຍພວກເຈົ້າໃຫ້ພົ້ນ."
[5]ແລ້ວຕາຂອງຄົນຕາບອດຈະເບິ່ງເຫັນ, ແລະ ຫູຂອງຄົນຫູຫນວກຈະໄດ້ຍິນ.[6]ແລ້ວຄົນຂາພິການຈະໂດດເຕັ້ນຄືກັບໂຕກວາງ, ແລະ
ລີ້ນຂອງຄົນປາກກືກຈະຮ້ອງເພງ, ເພາະນ້ຳໄດ້ໄຫລຂຶ້ນມາໃນອາຣາບາ, ແລະ ແມ່ນ້ຳທັງຫລາຍຈະເກີດຂຶ້ນໃນຖິ່ນທຸລະກັນດານ.
[7]ດິນຊາຍທີ່ຖືກແຜດເຜົາຈະກາຍເປັນສະນ້ຳ, ແລະ ພື້ນດິນທີ່ແຫ້ງແລ້ງຈະກາຍເປັນນ້ຳພຸ, ໃນທີ່ອາໄສຂອງຫມາປ່າ,
ບ່ອນທີ່ພວກມັນເຄີຍນອນຢູ່, ຈະກາຍເປັນຕົ້ນຫຍ້າກັບຕົ້ນໂອກແລະຕົ້ນອໍ້.
[8]ຈະມີທາງຫລວງສາຍຫນຶ່ງທີ່ເອີ້ນວ່າທາງບໍລິສຸດ, ຄົນທີ່ມີຄວາມບາບຈະບໍ່ເດີນໄປທາງນັ້ນ. ແຕ່ຈະເປັນທາງສຳລັບຄົນທີ່ເດີນໃນທາງນັ້ນ,
ບໍ່ມີຄົນໂງ່ຄົນໃດຈະໄປທາງນັ້ນ.[9]ຈະບໍ່ມີສິງໂຕຢູ່ທີ່ນັ້ນ, ຈະບໍ່ມີສັດດຸຮ້າຍອາໄສຢູ່ບ່ອນນັ້ນ, ຈະບໍ່ເຫັນພວກມັນຢູ່ບ່ອນນັ້ນ,
ແຕ່ວ່າຜູ້ທີ່ພຣະອົງຊົງໄຖ່ຈະຍ່າງໄປທີ່ນັ້ນ.
[10]ຜູ້ທີ່ໄດ້ຮັບການໄຖ່ຂອງພຣະຢາເວຈະກັບມາ ແລະ ຮ້ອງລຳທຳເພງຢູ່ ພູເຂົາຊີໂອນ, ແລະຄວາມສຸກອັນເປັນນິດຈະຢູ່ເທິງຫົວຂອງພວກເຂົາ;
ຄວາມປິຕິຍິນດີ ແລະ ຄວາມສຸກຈະເກີດຂຶ້ນກັບພວກເຂົາ; ຄວາມໂສກເສົ້າ ແລະ ຄວາມຂົມຂື່ນຈະຫາຍໄປ.


generated on Tue Jun 17 19:01:42 2025

# 36

[1]ໃນປີທີສິບສີ່ຂອງຣາຊການກະສັດເຮເຊກີຢາ, ເຊັນນາເກຣິບ, ກະສັດແຫ່ງອັດຊີເຣຍ, ໄດ້ບຸກໂຈມຕີບັນດາເມືອງປ້ອມປ້ອງກັນທັງຫມົດຂອງ
ຢູດາຍ ແລະ ໄດ້ຢຶດເມືອງເຫລົ່ານັ້ນ.[2]ແລ້ວກະສັດຂອງອັດຊີເຣຍ
ໄດ້ຊົງສັ່ງຜູ້ບັນຊາການທະຫານຈາກເມືອງລາກິດມາຍັງນະຄອນເຢຣູຊາເລັມເພື່ອມາເຝົ້າກະສັດ ເຮເຊກີຢາພ້ອມກັບກອງທັບໃຫຍ່,
ເຂົາໄດ້ມາເຖິງທີ່ຮາງລະບາຍນ້ຳຂອງສະບ່ອນສູງ, ຢູ່ທາງຫລວງໄປຫາບ່ອນຊັກຜ້າ, ແລະ ຢືນຢູ່ໃກ້ບ່ອນນັ້ນ.
[3]ພວກຂ້າຣາຊການອິດສະຣາເອນຜູ້ທີ່ໄດ້ອອກເຈາກເມືອງໄປເພື່ອເຈລະຈາກັບພວກເຂົາຄືເອລີອາກີມ,
ລູກຊາຍຂອງຮິນກີຢາຜູ້ຮັບຜິດຊອບຣາຊວັງ; ເຊັບນາເລຂາທິການ, ແລະໂຢອາລູກຊາຍຂອງອາສັບຜູ້ຂຽນບັນທຶກຄຳຕັດສິນທາງຣາຊການ.

[4]ຜູ້ບັນຊາການທະຫານໄດ້ກ່າວກັບພວກເຂົາວ່າ, "ຈົ່ງບອກເຮເຊກີຢາວ່າກະສັດຜູ້ຍິ່ງໃຫຍ່, ຄືກະສັດແຫ່ງອັດຊີເຣຍ, ກ່າວວ່າ,
'ເຈົ້າຫມັ້ນໃຈຄວາມຊ່ວຍເຫລືອຈາຫຜູ້ໃດ?[5]ເຈົ້າເວົ້າພຽງແຕ່ຄຳເວົ້າທີ່ບໍ່ມີປະໂຫຍດ, ເຈົ້າເວົ້າວ່າມີທີ່ປຶກສາ ແລະ ກຳ ລັງຮົບສຳລັບສົງຄາມ.
ດຽວນີ້ເຈົ້າໄວ້ໃຈໃຜ? ມີໃຜທີ່ເຮັດໃຫ້ເຈົ້າກ້າກະບົດຕໍ່ເຮົາ?
[6]ເບິ່ງແມ, ເຈົ້າໄວ້ວາງໃຈໃນປະເທດເອຢິບ, ທີ່ເຈົ້າໃຊ້ເປັນໄມ້ຄັນເທົ້າເປັນຕົ້ນກົກທີ່ແຕກແລ້ວ,
ແຕ່ຖ້າມີຄົນກຳເທິງໄມ້ນັ້ນມັນກໍຈະປັກແລະແທງມືຂອງເຂົາ, ຟາໂຣກະສັດຂອງ ເອຢິບຈະເປັນເຊັ່ນນັ້ນຕໍ່ຄົນທີ່ວາງໃຈໃນຕົວເຂົາ.
[7]ແຕ່ຖ້າເຈົ້າເວົ້າກັບເຮົາວ່າ,"ວາງໃຈໃນພຣະຢາເວພຣະເຈົ້າຂອງພວກເຮົາ," ກໍຍ້ອນພຣະອົງບໍ່ແມ່ນຫລືທີ່ເຮເຊກີຢາໄດ້ຮື້ທຳລາຍສະຖານສູງ
ແລະ ແທ່ນບູຊາຂອງພະອົງຖິ້ມໄປ, ແລະ ເຂົາກ່າວກັບຢູດາຍ ແລະ ເຢຣູຊາເລັມວ່າ,
"ພວກເຈົ້າຕ້ອງນະມັດສະການຕໍ່ຫນ້າແທ່ນບູຊານີ້ໃນເມືອງເຢຣູຊາເລັມ ບໍ"?
[8]ເພາະສະນັ້ນບັດນີ້, ຂ້ອຍຕ້ອງການຍື່ນຂໍ້ສະເຫນີທີ່ດີຈາກກະສັດຂອງ ອັດຊີເຣຍ. ເຈົ້ານາຍຂອງຂ້ອຍໃຫ້ແກ່ເຈົ້າ,
ຂ້ອຍຈະເອົາມ້າສອງພັນໂຕໃຫ້ແກ່ເຈົ້າຖ້າຫາກເຈົ້າຫາຄົນທີ່ຈະຂີ່ມ້າເຫລົ່ານັ້ນໄດ້.
[9]ແມ່ນແຕ່ນາຍກອງຜູ້ເລັກນ້ອຍທີ່ຜູ້ຫນຶ່ງຂອງພວກຂ້າຣາຊການຂອງເຈົ້ານາຍຂ້ອຍ ເຈົ້າຈະຕ້ານທານໄດ້ແນວໃດ?
ເຈົ້າໄດ້ວາງໃຈໃນເອຢິບສຳລັບບັນດາລົດມ້າ ແລະ ພວກທະຫານມ້າ![10]ແລ້ວຕອນນີ້, ຂ້ອຍໄດ້ເດີນທາງມາທີ່ນີ້ເພື່ອຕໍ່ສູ້ ແລະ
ທຳລາຍແຜ່ນດິນນີ້ໂດຍປາສະຈາກຄວາມຊ່ວຍເຫລືອຈາກພຣະຢາເວຊັ້ນບໍ? ພຣະເຈົ້າຢາເວໄດ້ກ່າວກັບຂ້ອຍວ່າ, "ຈົ່ງໂຈມຕີແຜ່ນດິນນີ້ ແລະ
ທຳລາຍມັນເສຍ."'"
[11]ແລ້ວເອລີອາກີມລູກຊາຍຂອງຮິນກີຢາ, ແລະ ເຊັບນາ, ແລະ ໂຢອາທີ່ໄດ້ກ່າວກັບຜູ້ບັນຊາການທະຫານວ່າ,
"ກະລຸນາເວົ້າກັບພວກຜູ້ຮັບໃຊ້ຂອງທ່ານເປັນພາສາ, ອາຣາມິກ, ເລີຍເພາະພວກເຮົາເຂົ້າໃຈ.
ພາສານັ້ນຢ່າເວົ້າກັບພວກເຮົາເປັນພາສາຢູດາຍໃຫ້ເຂົ້າຫູປະຊາຊົນທີ່ຢູ່ເທິງກຳແພງເລີຍ."[12]ແຕ່ຜູ້ບັນຊາການທະຫານໄດ້ກ່າວວ່າ,
"ເຈົ້ານາຍຂອງຂ້ອຍໄດ້ສົ່ງຂ້ອຍມາຫາເຈົ້ານາຍຂອງເຈົ້າ ແລະ ເຈົ້າເພື່ອຈະເວົ້າຖ້ອຍຄຳນີ້ບໍ່?
ພະອົງບໍ່ໄດ້ສົ່ງຂ້ອຍມາຫາພວກຄົນທີ່ນັ່ງຢູ່ເທິງກຳແພງຜູ້ທີ່ຈະຕ້ອງກິນຂີ້ແລະກິນຍ່ຽວຂອງພວກເຂົາເອງພ້ອມກັບເຈົ້າບໍ?"
[13]ແລ້ວຜູ້ບັນຊາການທະຫານໄດ້ຢືນຂຶ້ນແລະ ຮ້ອງຂຶ້ນດ້ວຍສຽງດັງເປັນພາສາເຮັບເຣີ, ກ່າວວ່າ, "ຈົ່ງຟັງຖ້ອຍຄຳຂອງກະສັດ ອັດຊີເຣຍ,
ກະສັດຜູ້ຍິ່ງໃຫຍ່.[14]ກະສັດໄດ້ກ່າວວ່າ, ' ຢ່າໃຫ້ ເຮເຊກີຢາຫລອກລວງພວກເຈົ້າ, ເພາະເຂົາຈະບໍ່ສາມາດຊ່ວຍຫຍັງພວກເຈົ້າໄດ້.
[15]ຢ່າຟັງເຮເຊກີຢາທີ່ບອກໃຫ້ພວກເຈົ້າວາງໃຈໃນພຣະຢາເວ, ໂດຍກ່າວວ່າ, "ພຣະຢາເວຈະຊົງຊ່ວຍເຫລືອພວກເຮົາຢ່າງແນ່ນອນ;
ເມືອງນີ້ຈະບໍ່ຖືກມອບໄວ້ໃນມືຂອງກະສັດ ອັດຊີເຣຍ.'"
[16]ຢ່າຟັງ ເຮເຊກີຢາ, ເພາະກະສັດຂອງ ອັດຊີເຣຍ ກ່າວດັ່ງນີ້ວ່າ: 'ຈົ່ງເຮັດສັນຍາສັນຕິພາບກັບເຮົາ ແລະ ອອກມາຫາເຮົາ.
ແລ້ວພວກເຈົ້າແຕ່ລະຄົນຈະກິນຫມາກອາງຸ່ນຂອງຕົນ ແລະ ຈາກຕົ້ນຫມາກເດື່ອຂອງຕົນເອງ, ແລະ ດື່ມນ້ຳໃນອ່າງຂອງຕົນເອງ.
[17]ພວກເຈົ້າຈະເຮັດແບບນີ້ຈົນກວ່າເຮົາຈະມາແລະເອົາຕົວພວກເຈົ້າໄປຍັງແຜ່ນດິນທີ່ຄືກັບແຜ່ນດິນຂອງເຈົ້າເອງ, ຄືແຜ່ນດິນທີ່ມີເຂົ້າ ແລະ
ເຫລົ້າອາງຸ່ນໃຫມ່, ແຜ່ນດິນທີ່ມີເຂົ້າຈີ່ ແລະ ສວນຫມາກອະງຸ່ນ"
[18]ຢ່າໃຫ້ ເຮເຊກີຢາເຮັດໃຫ້ພວກເຈົ້າຫລົງຜິດໄປ, ໂດຍກ່າວວ່າ,' ພຣະຢາເວຈະຊົງຊ່ວຍພວກເຮົາ,
ມີພະເຈົ້າອົງໃດຂອງຊົນຊາດທັງຫລາຍທີ່ຊ່ວຍພວກເຂົາໃຫ້ລອດພົ້ນຈາກພະຫັດຂອງກະສັດອັດຊີເຣຍໄດ້ບໍ?[19]ພະເຈົ້າຂອງເມືອງຮາມັດ ແລະ
ເມືອງອັກປັດ ຢູ່ບ່ອນໃດ? ພະເຈົ້າຂອງເມືອງເສຟາກວາອິມ ຢູ່ບ່ອນໃດ? ພວກເຂົາຊ່ວຍ ຊາມາເຣຍຈາກອຳນາດຂອງເຮົາໄດ້ບໍ?
[20]ມີພະເຈົ້າອົງໃດທ່າມກາງພະເຈົ້າທັງຫມົດຂອງແຜ່ນດິນເຫລົ່ານີ້ທີ່ຊ່ວຍກູ້ແຜ່ນດິນຈາກອຳນາດຂອງເຮົາໄດ້,
ແລ້ວພຣະຢາເວຈະຊ່ວຍນະຄອນເຢຣູຊາເລັມໄດ້ບໍ?"
[21]ແຕ່ປະຊາຊົນຍັງມິດຢູ່ແລະບໍ່ຕອບ, ເພາະຄຳສັ່ງຂອງກະສັດວ່າ, "ຢ່າໂຕ້ຕອບເຂົາ"[22]ແລ້ວເອລີອາກີມລູກຊາຍຂອງຮິນກີຢາ,
ຜູ້ຮັບຜິດຊອບຣາຊະວັງ, ເຊັບນາຜູ້ເປັນເລຂາທິການ, ແລະ ໂຢອາລູກຊາຍຂອງອາສັບ ຜູ້ບັນທຶກ,
ໄດ້ມາເຂົ້າເຝົ້າເຮເຊກີຢາດ້ວຍເສື້ອຜ້າທີ່ຈີກຂາດ, ແລະ ໄດ້ກາບທູນຖ້ອຍຄຳຂອງຜູ້ບັນຊາການທະຫານໃຫ້ພະອົງຊົງຮູ້.

 generated on Tue Jun 17 19:01:42 2025

37 [1]ຕໍ່ມາເມື່ອກະສັດເຮເຊກີຢາໄດ້ຍິນຄຳຖວາຍລາຍງານຂອງພວກເຂົາແລ້ວ, ພະອົງໄດ້ຈີກເສື້ອຜ້າຂອງພະອົງ, ແລະ
ຊົງປົກຄຸມພະອົງເອງດ້ວຍເຄື່ອງນຸ່ງຜ້າກະສອບ, ແລະເຂົ້າໄປໃນພຣະວິຫານຂອງພຣະຢາເວ.
[2]ພະອົງໄດ້ຊົງໃຊ້ເອລີອາກິມຜູ້ຮັບຜິດຊອບຣາຊວັງ, ແລະ ເຊັບນາຜູ້ເປັນເລຂາທິການ, ແລະບັນດາພວກປະໂລຫິດອາວຸໂສ,
ເຊິ່ງທຸກໆຄົນໄດ້ນຸ່ງເຄື່ອງທີ່ເຮັດດ້ວຍຜ້າກະສອບໄປຫາເອຊາຢາຜູ້ເປັນລູກຊາຍຂອງອາໂມດ, ຜູ້ທຳນວາຍ.

[3]ພວກເຂົາໄດ້ກ່າວກັບລາວວ່າ, "ເຮເຊກີຢາ ກ່າວວ່າ," ມື້ນີ້ແມ່ນວັນແຫ່ງຄວາມທຸກໃຈ, ວັນທີ່ຖືກປະນາມ ແລະ ວັນແຫ່ງຄວາມອັບປະຍົດອົດສູ,
ຄືກັບວ່າເດັກກຳລັງຈະເກີດ, ແຕ່ຜູ້ເປັນແມ່ບໍ່ມີກຳລັງທີ່ຈະເບັ່ງລູກຂອງນາງໃຫ້ເກີດມາ.
[4]ບາງທີພຣະຢາເວພຣະເຈົ້າຂອງພວກເຈົ້າຈະຊົງໄດ້ຍິນຖ້ອຍຄຳຂອງຫົວໜ້າຜູ້ບັນຊາການທະຫານ,
ຊຶ່ງກະສັດອັດຊີເຣຍຜູ້ເປັນເຈົ້ານາຍຂອງເຂົາໄດ້ໃຊ້ເຂົາໄປເພື່ອຕໍ່ຕ້ານພຣະເຈົ້າຜູ້ຊົງພຣະຊົນຢູ່, ແລະ
ຈະສັ່ງຫ້າມຄຳເວົ້າທີ່ພຣະຢາເວພຣະເຈົ້າຂອງພວກເຈົ້າໄດ້ຍິນ. ບັດນີ້ຈົ່ງຍົກຄຳອະທິຖານຂອງທ່ານສຳລັບພວກຄົນທີ່ເຫລືອຢູ່ທີ່ຍັງຄອຍຢູ່ທີ່ນີ້. '"
[5]ດັ່ງນັ້ນພວກຂ້າຣາຊະການຂອງກະສັດເຮເຊກີຢາໄດ້ມາຫາເອຊາຢາ,[6]ແລະ ເອຊາຢາໄດ້ກ່າວກັບພວກເຂົາວ່າ, "ຈົ່ງເວົ້າກັບເຈົ້ານາຍຂອງເຈົ້າວ່າ:
'ພຣະຢາເວກ່າວວ່າ,"ຢ່າຊູ່ຢ້ານຄຳເວົ້າທີ່ເຈົ້າໄດ້ຍິນ, ດ້ວຍຄຳເວົ້າເຊິ່ງພວກຂ້າຣາຊະການຂອງກະສັດອັດຊີເຣຍໄດ້ດູຖູກເຮົາ.[7]ຈົ່ງເບິ່ງ,
ເຮົາຈະໃສ່ວິນຍານຫນຶ່ງໃນຕົວຂອງລາວ, ແລະລາວຈະໄດ້ຍິນຂ່າວທີ່ສຳຄັນ ແລະ ກັບໄປຫາແຜ່ນດິນຂອງລາວ.
ເຮົາຈະເຮັດໃຫ້ລາວລົ້ມລົງດ້ວຍດາບໃນດິນແດນຂອງລາວເອງ. '""
[8]ແລ້ວຜູ້ບັນຊາການທະຫານໄດ້ກັບຄືນໄປແລະພົບກະສັດອັດຊີເຣຍກຳລັງສູ້ຮົບກັບ ເມືອງລິບນາ,
ເພາະວ່າພະອົງໄດ້ຍິນວ່າກະສັດໄດ້ຫນີໄປຈາກເມືອງລາກິດ.[9]ແລ້ວເຊັນນາເກອາຣິບໄດ້ຍິນວ່າກະສັດຕີຣາກາຂອງປະເທດເອທີໂອເປຍ ແລະ
ເອຢິບໄດ້ຮວມໂຕກັນຕໍ່ສູ້ກັບພະອົງ, ດັ່ງນັ້ນພະອົງຈຶ່ງໄດ້ສົ່ງຜູ້ສົ່ງຂ່າວໄປຫາເຮເຊກີຢາດ້ວຍຂໍ້ຄວາມທີ່ວ່າ:[10]"ຈົ່ງເວົ້າກັບເຮເຊກີຢາ,
ກະສັດແຫ່ງຢູດາຍວ່າ, 'ຢ່າໃຫ້ພຣະເຈົ້າຂອງທ່ານຜູ້ທີ່ທ່ານໄວ້ວາງໃຈຫລອກລວງທ່ານ, ໂດຍກ່າວວ່າ,
"ເຢຣູຊາເລັມຈະບໍ່ຖືກມອບໄວ້ໃນກຳມືຂອງກະສັດອັດຊີເຣຍ."
[11]ເບິ່ງເຖີດ, ທ່ານໄດ້ຍິນແລ້ວສິ່ງທີ່ກະສັດຂອງອັດຊີເຣຍໄດ້ເຮັດກັບດິນແດນທັງຫມົດໂດຍທຳລາຍພວກເຂົາຈົນຫມົດສິ້ນ.
ດັ່ງນັ້ນທ່ານຈະໄດ້ຮັບການຊ່ວຍເຫລືອບໍ?[12]ບັນດາພະຂອງຊົນຊາດຕ່າງໆໄດ້ຊ່ວຍເຫລືອພວກເຂົາ,
ຊົນຊາດທັງຫລາຍທີ່ບັນພະບຸລຸດຂອງເຮົາໄດ້ທຳລາຍຄື: ໂກຊານ, ຮາຣານ, ເຣເຊັບ, ແລະ ປະຊາຊົນເອເດນໃນເມືອງເຕລາສາ?
[13]ກະສັດຂອງເມືອງຮາມັດ, ກະສັດແຫ່ງອັກປັດ, ກະສັດໃນເມືອງຕ່າງໆຂອງເມືອງເສຟາກວາອິມ, ເມືອງເຮນາ, ແລະ ເມືອງອີວາຢູ່ບ່ອນໃດ? '"
[14]ເຮເຊກີຢາໄດ້ຮັບຈົດຫມາຍສະບັບນີ້ຈາກມືຂອງຜູ້ສົ່ງຂ່າວສານແລະອ່ານມັນ. ຫລັງຈາກນັ້ນພະອົງໄດ້ສະເດັດຂຶ້ນໄປໃນພຣະວິຫານຂອງ
ພຣະຢາເວ ແລະຊົງເປີດຈົດຫມາຍຕໍ່ຫນ້າພຣະອົງ.[15]ເຮເຊກີຢາ ໄດ້ອະທິຖານຕໍ່ພຣະຢາເວວ່າ:[16]"ຂ້າແດ່ພຣະຢາເວຈອມໂຍທາ,
ພຣະເຈົ້າແຫ່ງອິດສະຣາເອນ, ພຣະອົງຜູ້ຊົງປະທັບເຫນືອທູດສະຫວັນ,
ພຣະອົງຊົງເປັນພຣະເຈົ້າອົງດຽວເຫນືອອານາຈັກທັງຫມົດຂອງແຜ່ນດິນໂລກ. ພຣະອົງໄດ້ຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ.
[17]ຂ້າແດ່ພຣະຢາເວ, ຂໍໂຜດຊົງຫງ່ຽງຫູ, ແລະ ຊົງຟັງສຽງພວກຂ້ານ້ອຍດ້ວຍເທີ້ນ. ຂໍພຣະອົງຊົງເປີດຕາ, ແລະຊົງເບິ່ງ, ແລະ
ຊົງຟັງຖ້ອຍຄຳຂອງເຊັນນາເກຣິບ, ທີ່ລາວໄດ້ສົ່ງມາເພື່ອເຍາະເຍີ້ຍພຣະເຈົ້າທີ່ມີຊີວິດຢູ່.[18]ຂ້າແດ່, ພຣະຢາເວ,
ມັນເປັນຄວາມຈິງທີ່ບັນດາກະສັດຂອງອັດຊີເຣຍໄດ້ທຳລາຍປະຊາຊາດທັງຫມົດ ແລະ ດິນແດນຂອງພວກເຂົາ.
[19]ພວກເຂົາໄດ້ເອົາພະທັງຫລາຍຂອງພວກເຂົາເຂົ້າໄປໃນເຕົາໄຟ, ເພາະວ່າສິ່ງເຫລົ່ານັ້ນບໍ່ແມ່ນພະເຈົ້າແຕ່ເປັນຜົນງານຂອງມືມະນຸດ,
ເປັນພຽງແຕ່ໄມ້ແລະຫີນ. ດັ່ງນັ້ນຊາວອັດຊີເຣຍຈຶ່ງໄດ້ທຳລາຍສິ່ງເຫລົ່ານັ້ນ.[20]ເພາະສະນັ້ນບັດນີ້, ຂ້າແດ່ພຣະຢາເວ
ພຣະເຈົ້າຂອງຂ້ານ້ອຍທັງຫລາຍ, ຂໍຊົງຊ່ວຍພວກຂ້ານ້ອຍໃຫ້ລອດພົ້ນຈາກອຳນາດຂອງເຂົາ,
ເພື່ອວ່າອານາຈັກທັງຫມົດເທິງແຜ່ນດິນໂລກຈະຮູ້ວ່າພຣະອົງພຽງຜູ້ດຽວທີ່ຊົງເປັນພຣະຢາເວ."
[21]ແລ້ວເອຊາຢາລູກຊາຍຂອງອາມອດ ໄດ້ສົ່ງຂໍ້ຄວາມເຖິງເຮເຊກີຢາ, ກ່າວວ່າ, "ພຣະຢາເວ, ພຣະເຈົ້າຂອງອິດສະຣາເອນກ່າວວ່າ,
'ເພາະວ່າເຈົ້າໄດ້ອະທິຖານຕໍ່ເຮົາເຖິງເລື່ອງ ເຊັນນາເກຣິບກະສັດແຫ່ງອັດຊີເຣຍ,[22]ນີ້ແມ່ນຖ້ອຍຄຳທີ່ພຣະຢາເວໄດ້ເວົ້າກ່ຽວກັບລາວວ່າ: "
ຍິງສາວບໍລິສຸດຂອງສີໂອນດູຫມິ່ນເຈົ້າ ແລະ ຫົວຂັວນເຍາະເຍີ້ຍເຈົ້າຫມິ່ນປະຫມາດເຈົ້າ; ລູກສາວຂອງເຢຣູຊາເລັມສັ່ນຫົວຂອງນາງຕໍ່ເຈົ້າ.
[23]ເຈົ້າໄດ້ທ້າທາຍ ແລະ ດູຖູກຜູ້ໃດ? ເຈົ້າໄດ້ຂຶ້ນສຽງຂອງເຈົ້າ ແລະ ສົ່ງສາຍຕາຂອງເຈົ້າດ້ວຍຄວາມອວດອົ່ງຕໍ່ຜູ້ໃດແດ່?
ຕໍ່ພຣະອົງຜູ້ບໍລິສຸດຂອງອິດສະຣາເອນ.
[24]ເຈົ້າໄດ້ທ້າທາຍອົງພຣະຜູ້ເປັນເຈົ້າໂດຍພວກຜູ້ຮັບໃຊ້ຂອງເຈົ້າ ແລະ ໄດ້ກ່າວວ່າ, 'ດ້ວຍລົດຮົບຢ່າງຫລວງຫລາຍຂອງຂ້ອຍ,
ຂ້ອຍຈະຂຶ້ນໄປເຖິງບ່ອນສູງຂອງພູເຂົາທັງຫລາຍ, ໄປຈົນເຖິງທີ່ສູງທີ່ສຸດຂອງເລບານອນ. ຂ້ອຍຈະຕັດຕົ້ນສົນສີດາທີ່ສູງຂອງມັນລົງ, ແລະ
ຕົ້ນໄມ້ປະດັບທີ່ສວຍງາມຢູ່ທີ່ນັ້ນ, ແລະ ຂ້ອຍຈະເຂົ້າໄປໃນບ່ອນສູງທີ່ສຸດຂອງມັນ, ເຂົ້າໄປໃນປ່າເລິກທີ່ສຸດ.[25]ຂ້ອຍໄດ້ຂຸດນ້ຳສ້າງ ແລະ ດື່ມນ້ຳ;
ຂ້ອຍໄດ້ເຮັດໃຫ້ແມ່ນ້ຳທຸກສາຍຂອງປະເທດເອຢິບແຫ້ງໄປພາຍໃຕ້ຕີນຂອງຂ້ອຍ.'
[26]ເຈົ້າບໍ່ໄດ້ຍິນບໍວ່າເຮົາໄດ້ກຳນົດໄວ້ແຕ່ດົນນານມາແລ້ວ ແລະ ໄດ້ປະຕິບັດມັນມາແລ້ວໃນສະໄຫມບູຮານ?
ດຽວນີ້ເຮົາໄດ້ເຮັດໃຫ້ມັນຜ່ານໄປແລ້ວ. ເຈົ້າຢູ່ທີ່ນີ້ເພື່ອເຮັດໃຫ້ເມືອງທີ່ເຂັ້ມແຂງທັງຫລາຍພັງທະລາຍລົງກາຍເປັນຊາກຫັກພັງ.
[27]ປະຊາຊົນຂອງພວກເຂົາ, ກໍອ່ອນກຳລັງ, ຫມົດຫວັງ ແລະ ອັບອາຍ. ພວກເຂົາເປັນພືດໃນທົ່ງນາ, ເປັນຫຍ້າອ່ອນ,
ຫຍ້າຢູ່ເທິງຫລັງຄາຫລືໃນທົ່ງນາ, ກ່ອນທີ່ຈະມີລົມຕາເວັນອອກ.
[28]ແຕ່ເຮົາຮູ້ຈັກການນັ່ງຂອງເຈົ້າ, ການອອກໄປຂອງເຈົ້າ, ການເຂົ້າມາຂອງເຈົ້າ, ແລະຄວາມໂກດແຄ້ນຂອງເຈົ້າທີ່ມີຕໍ່ເຮົາ.
[29]ຍ້ອນຄວາມໂກດແຄ້ນຂອງເຈົ້າທີ່ມີຕໍ່ເຮົາ, ແລະ ເພາະວ່າຄວາມຈອງຫອງຂອງເຈົ້າໄດ້ເຂົ້າມາເຖິງຫູຂອງເຮົາ,
ເຮົາຈະເອົາຂໍຂອງເຮົາເກາະໃສ່ດັງຂອງເຈົ້າ, ແລະ ເອົາບັງຫຽນຂອງເຮົາໃສ່ປາກເຈົ້າ; ເຮົາຈະຫັນເຈົ້າກັບຕາມທາງທີ່ເຈົ້າມາ."
[30]ນີ້ຈະເປັນເຄື່ອງຫມາຍສຳລັບເຈົ້າ: ໃນປີນີ້ເຈົ້າຈະກິນສິ່ງທີ່ເກີດຂຶ້ນເອງຈາກທຳມະຊາດ, ແລະໃນປີທີສອງຈະກິນສິ່ງທີ່ເກີດຈາກນັ້ນ.
ແຕ່ໃນປີທີສາມເຈົ້າຕ້ອງປູກ ແລະ ເກັບກ່ຽວ, ຈົ່ງປູກຕົ້ນອະງຸ່ນແລະກິນຫມາກຂອງມັນ.


generated on Tue Jun 17 19:01:42 2025

31 ຄົນທີ່ເຫລືອຢູ່ຂອງເຊື້ອສາຍຢູດາຍທີ່ມີຊີວິດລອດຈະຢັ່ງຮາກລົງອີກຄັ້ງ ແລະ ເກີດຜົນ. 32 ເພາະວ່າຄົນທີ່ເຫລືອຢູ່ຈະອອກມາຈາກເຢຣູຊາເລັມ;
ຄົນທີ່ລອດຊີວິດອອກຈາກພູສີໂອນ. ຄວາມຮ້ອນຮົນຂອງພຣະຢາເວຈອມໂຍທາຈະຊົງເຮັດສິ່ງນີ້. '"
33 ເພາະສະນັ້ນ, ພຣະຢາເວກ່າວກ່ຽວກັບກະສັດອັດຊີເຣຍດັ່ງນີ້ວ່າ: "ລາວຈະບໍ່ເຂົ້າມາໃນເມືອງນີ້, ຫລືຍິງລູກສອນມາທີ່ນີ້.
ອີກທັງລາວຈະບໍ່ຖືໂລ່ມາຕໍ່ຫນ້າເມືອງນີ້ຫລືສ້າງທາງຂຶ້ນອ້ອມຮອບເພື່ອຕໍ່ສູ້ກັບເມືອງນີ້.
34 ທາງທີ່ລາວມານັ້ນຈະເປັນທາງດຽວກັນທີ່ລາວຈະຈາກໄປ, ລາວຈະບໍ່ເຂົ້າໄປໃນເມືອງນີ້ ນີ້ແມ່ນຄໍາປະກາດຂອງພຣະຢາເວ.
35 ເພາະວ່າເຮົາຈະປົກປ້ອງເມືອງນີ້ແລະກອບກູ້ເມືອງນີ້, ເພາະເຫັນແກ່ເຮົາເອງ ແລະ ເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ."
36 ແລ້ວເທວະດາຂອງພຣະຢາເວໄດ້ອອກໄປໂຈມຕີຄ້າຍທະຫານອັດຊີເຣຍ, ເຮັດໃຫ້ທະຫານເສຍຊີວິດ185.000 ຄົນ.
ເມື່ອພວກຜູ້ຊາຍລຸກຂຶ້ນແຕ່ເຊົ້າ, ຊາກສົບຂອງຄົນຕາຍເດຍລະດາດຢູ່ທົ່ວທຸກແຫ່ງ.
37 ດັ່ງນັ້ນກະສັດເຊັນນາເກອາຣິບກະສັດແຫ່ງອັດຊີເຣຍໄດ້ອອກຈາກປະເທດອິດສະຣາເອນ ແລະ ກັບເມືອບ້ານ ແລະ ໄດ້ອາໄສຢູ່ທີ່ເມືອງນີເນເວ.
38 ຕໍ່ມາ, ໃນຂະນະທີ່ພະອົງກໍາລັງຂາບໄຫວ້ນີຊະໂລກພະຂອງຕົນໃນວິຫານ,
ອັດຣໍາເມເລັກແລະຊາເຣເຊລູກຊາຍຂອງລາວໄດ້ຂ້າລາວດ້ວຍດາບ. ແລ້ວພວກເຂົາກໍໄດ້ຫນີເຂົ້າໄປໃນແຜ່ນດິນອາຣາຣັດ.
ແລ້ວເອສາຮັດໂດນລູກຊາຍຂອງລາວໄດ້ຂຶ້ນປົກຄອງແທນ.


generated on Tue Jun 17 19:01:42 2025

38 [1]ໃນເວລານັ້ນເຮເຊກີຢາ ໄດ້ເຈັບປ່ວຍຈົນເຖິງຂັ້ນໃກ້ຈະເສຍຊີວິດ. ດັ່ງນັ້ນເອຊາຢາລູກຊາຍຂອງອາມອດ, ຜູ້ທຳນວາຍ, ໄດ້ມາຫາເພິ່ນ,
ແລະກ່າວກັບລາວວ່າ, "ພຣະຢາເວກ່າວວ່າ,' ຈົ່ງຈັດການບ້ານເຮືອນຂອງເຈົ້າໃຫ້ຮຽບຮ້ອຍ; ເພາະວ່າເຈົ້າຈະຕາຍ,
ເຈົ້າຈະບໍ່ມີຊີວິດຢູ່."[2]ແລ້ວເຮເຊກີຢາໄດ້ຫັນຫນ້າເຂົ້າຂ້າງຝາແລະອະທິຖານຕໍ່ພຣະຢາເວ.[3]ເພິ່ນໄດ້ກ່າວວ່າ, "ຂ້າແດ່, ພຣະຢາເວ,
ຂໍຊົງໂຜດລະນຶກເຖິງການທີ່ຂ້ານ້ອຍໄດ້ດຳເນີນຕໍ່ພະພັກພຣະອົງຢ່າງສັດຊື່ດ້ວຍສຸດໃຈຂອງຂ້ານ້ອຍ, ແລະ
ການທີ່ຂ້ານ້ອຍໄດ້ເຮັດສິ່ງທີ່ດີໃນສາຍພຣະເນດຂອງພຣະອົງເຈົ້າ." ແລ້ວເຮເຊກີຢາໄດ້ຮ້ອງໄຫ້ຢ່າງແຮງ.

[4]ຕໍ່ມາຖ້ອຍຄຳຂອງພຣະຢາເວໄດ້ມາເຖິງ ເອຊາຢາ, ກ່າວວ່າ:[5]“ ຈົ່ງໄປເວົ້າກັບເຮເຊກີຢາ, ຜູ້ນຳຂອງປະຊາຊົນຂອງເຮົາວ່າ,
'ນີ້ແມ່ນສິ່ງທີ່ພຣະຢາເວ, ພຣະເຈົ້າຂອງດາວິດເຊື້ອສາຍຂອງທ່ານ, ກ່າວວ່າດັ່ງນີ້: ເຮົາໄດ້ຍິນຄຳ ອະທິຖານຂອງເຈົ້າແລ້ວ,
ແລະເຮົາໄດ້ເຫັນນ້ຳຕາຂອງເຈົ້າ. ເບິ່ງແມ, ເຮົາຈະຕໍ່ຊີວິດຂອງເຈົ້າໃຫ້ອີກສິບຫ້າປີ.
[6]ແລ້ວເຮົາຈະຊ່ວຍເຫລືອເຈົ້າແລະເມືອງນີ້ໃຫ້ພົ້ນຈາກກຳມືຂອງກະສັດອັດຊີເຣຍ, ແລະເຮົາຈະປົກປ້ອງເມືອງນີ້.
[7]ນີ້ຈະເປັນເຄື່ອງຫມາຍສຳຄັນຈາກພຣະຢາເວ, ມາເຖິງພວກເຈົ້າວ່າເຮົາຈະເຮັດຕາມທີ່ເຮົາໄດ້ສັນຍາໄວ້.[8]ຈົ່ງເບິ່ງ,
ເຮົາຈະເຮັດໃຫ້ເງົາຂອງຂັ້ນບັນໄດຂອງອາຮາດໄດ້ສ້າງຖອຍຄືນໄປສິບຂັ້ນ. '"ດ້ວຍເຫດນີ້,
ເງົາຂອງຂັ້ນບັນໄດທີ່ເດໄປທາງຫນ້າຈຶ່ງໄດ້ຍ້ອນຫລັງກັບໄປອີກສິບຂັ້ນ.
[9]ນີ້ແມ່ນຄຳອະທິຖານເປັນລາຍລັກອັກສອນຂອງກະສັດເຮເຊກີຢາໃນຢູດາຍ, ເມື່ອເພິ່ນປ່ວຍແລະໄດ້ຫາຍດີແລ້ວ:
[10]"ຂ້ານ້ອຍໄດ້ກ່າວວ່າຊີວິດຂອງຂ້ານ້ອຍໄດ້ມາເຖິງເຄິ່ງທາງທີ່ຂ້ານ້ອຍຈະເຂົ້າໄປຍັງປະຕູຂອງແດນຄົນຕາຍ;
ຂ້ານ້ອຍຖືກສົ່ງໄປທີ່ນັ້ນຈາກປີເດືອນທີ່ເຫລືອຂອງຂ້ານ້ອຍ.[11]ຂ້ານ້ອຍໄດ້ກ່າວວ່າຈະບໍ່ໄດ້ເຫັນພຣະຢາເວອີກຕໍ່ໄປ,
ບໍ່ໄດ້ເຫັນພຣະຢາເວຢູ່ໃນແຜ່ນດິນຂອງຄົນເປັນ; ຂ້ານ້ອຍຈະບໍ່ໄດ້ເຫັນໂລກມະນຸດຫລືຜູ້ອາໄສຢູ່ໃນໂລກອີກຕໍ່ໄປ.
[12]ຊີວິດຂອງຂ້ານ້ອຍໄດ້ຖືກເອົາໄປແລະນຳໄປຈາກຂ້ານ້ອຍຄືກັບເຕັນຂອງຜູ້ລ້ຽງແກະ;
ຂ້ານ້ອຍໄດ້ມ້ວນຊີວິດຂອງຂ້ານ້ອຍເຫມືອນດັ່ງຄົນຕຳຜ້າ; ພຣະອົງໄດ້ຊົງຕັດຂ້ານ້ອຍອອກຈາກຫູກຕຳຜ້າ;
ພຣະອົງຊົງເຮັດໃຫ້ຊີວິດຂອງຂ້ານ້ອຍສິ້ນສຸດລົງ; ລະຫວ່າງກາງເວັນແລະກາງຄືນ.[13]ຂ້ານ້ອຍຮ້ອງຂຶ້ນຈົນຮອດຕອນເຊົ້າ;
ພຣະອົງຊົງຫັກກະດູກທັງຫມົດຂອງຂ້ານ້ອຍຄືກັບສິງໂຕ. ພຣະອົງຊົງເຮັດໃຫ້ຊີວິດຂອງຂ້ານ້ອຍສິ້ນສຸດລົງລະຫວ່າງກາງເວັນແລະກາງຄືນ.
[14]ຂ້ານ້ອຍຮ້ອງຈອກແຈກຄືກັບນົກແອ່ນ; ຂ້ານ້ອຍຂັນຄືກັນກັບນົກເຂົາ; ຕາຂອງຂ້ານ້ອຍອິດເມື່ອຍກັບການເບິ່ງໄປເບື້ອງເທິງ. ຂ້າແດ່.
ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍຖືກກົດຂີ່ຂົ່ມເຫັງ; ຂໍຊົງຊ່ວຍຂ້ານ້ອຍ.[15]ຂ້ານ້ອຍຈະເວົ້າຫຍັງໄດ້? ພຣະອົງໄດ້ກ່າວກັບຂ້ານ້ອຍ,
ແລະໄດ້ຊົງເຮັດແບບນັ້ນ, ຂ້ານ້ອຍຈະຍ່າງຊ້າໆຕະຫລອດປີເດືອນຂອງຂ້ານ້ອຍເພາະວ່າຂ້ານ້ອຍເຕັມໄປດ້ວຍຄວາມໂສກເສົ້າ.
[16]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຄວາມທຸກຍາກທີ່ພຣະອົງປະທານໃຫ້ເປັນສິ່ງທີ່ດີສຳລັບຂ້ານ້ອຍ; ຂໍໃຫ້ຊີວິດຂອງຂ້ານ້ອຍໄດ້ກັບຄືນມາສູ່ຂ້ານ້ອຍ;
ພຣະອົງໄດ້ຊົງຟື້ນຟູຊີວິດແລະສຸຂະພາບຂອງຂ້ານ້ອຍແລ້ວ.[17]ການໄດ້ພົບກັບຄວາມໂສກເສົ້າເຊັ່ນນັ້ນເປັນຜົນດີຕໍ່ຂ້ານ້ອຍ.
ພຣະອົງໄດ້ຊ່ວຍຂ້ານ້ອຍໃຫ້ພົ້ນຈາກຂຸມແຫ່ງການທຳລາຍ;
ເພາະພຣະອົງໄດ້ຊົງແກວ່ງຄວາມບາບທັງຫມົດຂອງຂ້ານ້ອຍໄວ້ເບື້ອງຫລັງຂອງພຣະອົງ.
[18]ເພາະວ່າແດນຂອງຄົນຕາຍບໍ່ຂອບພຣະຄຸນພຣະອົງ; ຄວາມຕາຍບໍ່ໄດ້ສັນລະເສີນພຣະອົງ;
ພວກຄົນທີ່ລົງໄປໃນຂຸມນັ້ນບໍ່ມີຄວາມຫວັງໃນຄວາມສັດຊື່ຂອງພຣະອົງ.[19]ຄົນທີ່ມີຊີວິດຢູ່, ຄົນທີ່ມີຊີວິດຢູ່, ເຂົາຄືຜູ້ທີ່ຂອບພຣະຄຸນພຣະອົງ,
ດັ່ງທີ່ຂ້ານ້ອຍເຮັດທຸກວັນນີ້; ຜູ້ເປັນບິດາບອກໃຫ້ລູກໆໄດ້ຮູ້ຈັກເຖິງຄວາມສັດຈິງຂອງພຣະອົງ.
[20]ພຣະເຈົ້າຢາເວຊົງຊ່ວຍຂ້ານ້ອຍໃຫ້ລອດ, ແລະ
ພວກເຮົາຈະສະຫລອງດ້ວຍການຮ້ອງເພງສັນລະເສີນຕະຫຼອດຊີວິດຂອງພວກເຮົາໃນພຣະວິຫານຂອງພຣະຢາເວ."
[21]"ຂໍໃຫ້ພວກເຂົາເອົາແປ້ງທີ່ເຮັດດ້ວຍຫມາກເດື່ອມາວາງໃສ່ບ່ອນທີ່ເຈັບປວດ, ແລະ ເພິ່ນຈະຫາຍດີປົກກະຕິ."[22]ເຮເຊກີຢາ ໄດ້ກ່າວອີກວ່າ,“
ສິ່ງໃດຈະເປັນຫມາຍສຳຄັນທີ່ເຮົາຄວນຈະຂຶ້ນໄປໃນພຣະວິຫານຂອງພຣະຢາເວ?


generated on Tue Jun 17 19:01:42 2025

39 [1]ໃນເວລານັ້ນເມໂຣດັກບາລາດານລູກຊາຍຂອງບາລາດານ, ກະສັດແຫ່ງບາບີໂລນ,
ໄດ້ສົ່ງຈົດຫມາຍແລະເຄື່ອງບັນນາການມາໃຫ້ເຮເຊກີຢາ; ເພາະລາວໄດ້ຍິນວ່າເຮເຊກີຢາໄດ້ປ່ວຍແລະໄດ້ຫາຍດີແລ້ວ.
[2]ເຮເຊກີຢາຊົງພໍໃຈກັບສິ່ງຂອງເຫລົ່ານີ້; ເພິ່ນໄດ້ຊົງໃຫ້ຜູ້ສົ່ງສານເບິ່ງຄັງຂອງສິ່ງຕ່າງໆທີ່ມີຄ່າຂອງເພິ່ນຄື, ເງິນ, ຄຳ, ເຄື່ອງເທດ, ແລະ
ນ້ຳມັນອັນລ້ຳຄ່າ, ບ່ອນເກັບມ້ຽນອາວຸດຂອງເພິ່ນ, ແລະ ຂອງທັງຫມົດທີ່ພົບເຫັນຢູ່ໃນສາງຂອງເພິ່ນ. ບໍ່ມີສິ່ງໃດໃນພະຣາຊວັງ,
ຫລືໃນອານາຈັກທັງຫມົດຂອງເພິ່ນ, ທີ່ເຮເຊກີຢາບໍ່ໄດ້ຊົງໃຫ້ພວກເຂົາເບິ່ງ.

[3]ແລ້ວເອຊາຢາຜູ້ທຳນວາຍໄດ້ມາເຂົ້າເຝົ້າກະສັດ ເຮເຊກີຢາແລະຖາມເພິ່ນວ່າ, "ຄົນເຫລົ່ານີ້ເວົ້າຫຍັງກັບພະອົງ? ພວກເຂົາມາຈາກໃສ?"
ເຮເຊກີຢາກ່າວວ່າ, "ພວກເຂົາມາຫາເຮົາຈາກປະເທດທີ່ຫ່າງໄກຂອງບາບີໂລນ."[4]ເອຊາຢາຖາມວ່າ,
"ພວກເຂົາໄດ້ເຫັນຫຍັງຢູ່ໃນວັງຂອງພະອົງ?" ເຮເຊກີຢາຕອບວ່າ, "ພວກເຂົາໄດ້ເຫັນທຸກສິ່ງທຸກຢ່າງຢູ່ໃນວັງຂອງເຮົາ.
ບໍ່ມີສິ່ງໃດໃນບັນດາສິ່ງທີ່ມີຄ່າຂອງເຮົາທີ່ເຮົາບໍ່ໄດ້ໃຫ້ພວກເຂົາເບິ່ງ."
[5]ແລ້ວເອຊາຢາໄດ້ກ່າວກັບ ເຮເຊກີຢາວ່າ,“ ຈົ່ງຟັງຖ້ອຍຄຳຂອງພຣະຢາເວຈອມໂຢທາ:[6]ເບິ່ງແມ,
ວັນເວລາກຳລັງຈະມາເຖິງເມື່ອທຸກສິ່ງໃນວັງຂອງເຈົ້າ, ສິ່ງຂອງຕ່າງໆທີ່ບັນພະບຸລຸດຂອງເຈົ້າເກັບໄວ້ຈົນຮອດທຸກວັນນີ້, ຈະຖືກນຳໄປສູ່ບາບີໂລນ.
ບໍ່ມີສິ່ງໃດຈະເຫລືອຢູ່ເລີຍ, ພຣະຢາເວກ່າວດັ່ງນີ້ແຫລະ.
[7]ພວກລູກຊາຍທັງຫລາຍທີ່ເກີດມາຈາກເຈົ້າ, ຜູ້ທີ່ເຈົ້າເອງເປັນບິດາພວກເຂົາຈະເອົາລູກຊາຍຂອງເຈົ້າໄປ,
ແລະພວກເຂົາຈະກາຍເປັນຂັນທີໃນພະຣາຊວັງຂອງກະສັດແຫ່ງບາບີໂລນ.'"[8]ແລ້ວເຮເຊກີຢາໄດ້ກ່າວກັບເອຊາຢາວ່າ,
"ຖ້ອຍຄຳຂອງພຣະຢາເວທີ່ທ່ານເວົ້ານັ້ນດີ." ເພາະພຣະອົງຊົງຄິດວ່າ, "ຈະມີຄວາມສະຫງົບສຸກແລະຫມັ້ນຄົງໃນສະໄຫມຂອງເຮົາ."

 generated on Tue Jun 17 19:01:42 2025

40 1ພຣະເຈົ້າ, ຂອງພວກເຈົ້າກ່າວວ່າ,"ຈົ່ງປອບໃຈແລະປອບໂຍນຜູ້ຄົນຂອງເຮົາ. 2"ຈົ່ງເວົ້າກັບ ເຢຣູຊາເລັມດ້ວຍຄວາມເຫັນໃຈ;
ແລະປະກາດກັບເມືອງນັ້ນວ່າສົງຄາມຂອງເມືອງນັ້ນໄດ້ສິ້ນສຸດລົງແລ້ວ, ປະກາດວ່າຄວາມຜິດບາບຂອງເມືອງນັ້ນໄດ້ຖືກອະໄພແລ້ວ,
ປະກາດວ່າເມືອງນັ້ນໄດ້ຮັບໂທດສຳລັບຄວາມຜິດບາບທັງຫມົດຈາກພຣະຫັດຂອງພຣະຢາເວເປັນສອງເທົ່າແລ້ວ."

3ມີສຽງຫນຶ່ງຮ້ອງອອກມາວ່າ, "ຈົ່ງຕຽມທາງຂອງພຣະຢາເວ; ໃນຖິ່ນທຸລະກັນດານ
ຈົ່ງເຮັດທາງຫລວງສຳລັບພຣະເຈົ້າຂອງພວກເຮົາໃນອາຣາບານໃຫ້ຊື່ໄປ." 4ຮ່ອມພູທຸກແຫ່ງຈະຖືກຍົກໃຫ້ສູງຂຶ້ນ,
ແລະທຸກພູເຂົາແລະເນີນພູຈະຖືກເຮັດໃຫ້ຕ່ຳລົງ; ແລະແຜ່ນດິນທີ່ແຂງແລະຫຍາບຈະຖືກປ່ຽນໃຫ້ເປັນດິນອ່ອນ,
ແລະບ່ອນສູງໆຕ່ຳໆຈະເຮັດໃຫ້ຮາບພຽງ; 5ແລະພຣະສະຫງ່າຣາສີຂອງພຣະຢາເວຈະຖືກເປີດເຜີຍ, ແລະທຸກຄົນຈະຫລຽວເຫັນພ້ອມກັນ;
ເພາະພຣະໂອດຂອງ ພຣະຢາເວໄດ້ກ່າວໄວ້ແລ້ວ.
6ມີສຽງຫນຶ່ງເວົ້າວ່າ, "ຈົ່ງຮ້ອງແມ." ອີກສຽງຫນຶ່ງຕອບວ່າ, "ຂ້ານ້ອຍຄວນຮ້ອງອັນໃດ?" ມະນຸດທັງປວງເປັນເຫມືອນຕົ້ນຫຍ້າ,
ແລະຄວາມສັດຊື່ໃນພັນທະສັນຍາທັງຫມົດຂອງພວກເຂົາປຽບເຫມືອນດອກໄມ້ໃນທົ່ງນາ.
7ຕົ້ນຫຍ້າກໍຫ່ຽວແຫ້ງແລະດອກໄມ້ຈະລົ່ນລົງເມື່ອລົມປານຂອງ ພຣະຢາເວເປົ່າມາຖືກມັນ; ແນ່ນອນມະນຸດຊາດກໍຄືຕົ້ນຫຍ້າ.
8ຕົ້ນຫຍ້າກໍຫ່ຽວແຫ້ງ, ແລະດອກໄມ້ກໍລົ່ນລົງ, ແຕ່ວ່າຖ້ອຍຄຳຂອງພຣະເຈົ້າຂອງພວກເຮົາຈະຢືນຢູ່ຕະຫລອດໄປ."
9ຈົ່ງຂຶ້ນໄປເທິງພູເຂົາສູງ, ຊີໂອນ, ຜູ້ນຳຂ່າວດີ. ຈົ່ງກ່າວກັບເມືອງທັງຫລາຍຂອງ, ເຢຣູຊາເລັມ. ຈົ່ງພາກັນໄປປະກາດຂ່າວດີຢູ່ທີ່ນັ້ນ.
ຈົ່ງບອກກັບເມືອງຕ່າງໆຂອງຢູດາຍວ່າ, ຢ່າຢ້ານກວາສິ່ງໃດ "ນີ້ແມ່ນພຣະເຈົ້າຂອງພວກເຈົ້າ!" 10ຈົ່ງເບິ່ງ,
ພຣະຢາເວອົງພຣະຜູ້ເປັນເຈົ້າສະເດັດມາເຫມືອນກັບນັກຮົບທີ່ມີໄຊຊະນະ, ແລະຣິດທານຸພາບທີ່ຍິ່ງໃຫຍ່ຂອງພຣະອົງກໍຄອບຄອງເພື່ອພຣະອົງ.
ເບິ່ງເຖີດ, ລາງວັນຂອງພຣະອົງແມ່ນຢູ່ກັບພຣະອົງ, ແລະພວກຄົນທີ່ພຣະອົງໄດ້ຊົງຊ່ວຍກໍໄປຢູ່ຕໍ່ພຣະພັກພຣະອົງ.
11ພຣະອົງຈະຊົງລ້ຽງຝູງແກະຂອງພຣະອົງເຫມືອນຜູ້ລ້ຽງແກະ, ພຣະອົງຈະຊົງຮວບຮວມລູກແກະເຫລົ່ານັ້ນໄວ້ໃນອ້ອມກອດຂອງພຣະອົງ,
ແລະຊົງອູ້ມມັນໄວ້ໃນເອິກຂອງພຣະອົງ, ແລະຈະຊົງຄ່ອຍໆນຳແກະທີ່ກຳລັງລ້ຽງລູກອ່ອນຂອງມັນໄປ.
12ຜູ້ໃດແທກມະຫາສະຫມຸດໄດ້ດ້ວຍອົ້ງມືຂອງຕົນ, ຫລືວັດແທກທ້ອງຟ້າດ້ວຍຝາມືຂອງຕົນ, ເອົາຜົງຂີ້ດິນຂອງແຜ່ນດິນໂລກໄວ້ໃນກະຈາດ,
ຊັ່ງນ້ຳຫນັກພູເຂົາທັງຫລາຍດ້ວຍຊິງ, ຫລືຊັ່ງເນີນພູດ້ວຍຕາຊູບໍ?
13ມີໃຜແດ່ທີ່ຍັງຮູ້ເຖິງພຣະໄທຂອງພຣະຢາເວ, ຫລືໃຫ້ຄຳແນະນຳພຣະອົງຄືກັບເປັນທີ່ປຶກສາຂອງພຣະອົງໄດ້?
14ພຣະອົງເຄີຍໄດ້ຮັບຄຳແນະນຳຈາກຜູ້ໃດຫລື? ມີໃຜສອນວິທີທີ່ຖືກຕ້ອງໃນການເຮັດສິ່ງຕ່າງໆ, ແລະສອນຄວາມຮູ້ໃຫ້ພຣະອົງ,
ຫລືສະແດງໃຫ້ພຣະອົງເຫັນທາງແຫ່ງຄວາມເຂົ້າໃຈແດ່?
15ຈົ່ງເບິ່ງ, ປະຊາຊາດທັງຫລາຍປຽບເຫມືອນກັບນ້ຳຢອດດຽວຢູ່ໃນຖັງເກັບນ້ຳ, ແລະຖືວ່າເປັນຄືຂີ້ຝຸ່ນຢູ່ເທິງຊິງສັ່ງ; ເບິ່ງແມ,
ພຣະອົງຊົງສັ່ງເກາະທັງຫລາຍຄືກັບຂີ້ເທົ່າ. 16ເລບານອນບໍ່ພໍທີ່ຈະເປັນນ້ຳມັນເຊື້ອໄຟ,
ອີກທັງສັດປ່າທັງຫລາຍມັນກໍບໍ່ພໍເປັນເຄື່ອງເຜົາບູຊາສຳລັບການເຜົາຖວາຍ. 17ປະຊາຊາດທັງຫມົດບໍ່ພຽງພໍຕໍ່ຫນ້າພຣະອົງ;
ພຣະອົງຖືວ່າພວກເຂົາບໍ່ມີຫຍັງເລີຍ.
18ແລ້ວພວກເຈົ້າຈະປຽບທຽບພຣະເຈົ້າກັບຜູ້ໃດ? ພວກເຈົ້າຈະສົມທຽບພຣະອົງກັບຮູບເຄົາລົບໃດ? 19ຮູບເຄົາລົບ!
ທີ່ຊ່າງຫັດຖະກຳຄົນຫນຶ່ງປັ້ນມັນຂຶ້ນມາ: ຊ່າງທອງຄຳໄດ້ຊຸບມັນດ້ວຍທອງຄຳແລະປະດິດໂສ້ເງິນໃຫ້ກັບມັນ.
20ຄົນເລືອກໄມ້ທີ່ບໍ່ເນົ່າເພື່ອເຮັດເຄື່ອງບູຊາ; ເຂົາຊອກຫາຊ່າງທີ່ມີຝີມືເພື່ອເຮັດຮູບເຄົາລົບທີ່ເຫນັງຕີງໄປມາບໍ່ໄດ້.
21ພວກເຈົ້າຍັງບໍ່ຮູ້ບໍ? ພວກເຈົ້າຍັງບໍ່ເຄີຍໄດ້ຍິນບໍ? ບໍ່ມີໃຜບອກພວກເຈົ້າຕັ້ງແຕ່ເລີ່ມຕົ້ນບໍ?
ພວກເຈົ້າຍັງບໍ່ເຂົ້າໃຈຕັ້ງແຕ່ວາງຮາກຖານຂອງແຜ່ນດິນໂລກບໍ? 22ພຣະອົງເປັນຜູ້ທີ່ປະທັບຢູ່ເຫນືອຂອບຟ້າຂອງແຜ່ນດິນໂລກ;
ແລະບັນດາຜູ້ທີ່ອາໄສຢູ່ແມ່ນຄືກັບຝູງຕັກແຕນຕໍ່ພຣະພັກພຣະອົງ.
ພຣະອົງໄດ້ຊົງດຶງທ້ອງຟ້າຄືກັບຜ້າກັ້ງແລະກາງທ້ອງຟ້າອອກເປັນເຕັນທີ່ຈະອາໄສຢູ່.
23ພຣະອົງຊົງເຮັດໃຫ້ຜູ້ປົກຄອງບໍ່ມີຫຍັງເລີຍ ແລະ ເຮັດໃຫ້ຜູ້ປົກຄອງແຜ່ນດິນໂລກຫມົດຄວາມສຳຄັນ. 24ພວກເຂົາຍັງບໍ່ທັນຈະປູກ,
ຍັງບໍ່ທັນຈະຫວ່ານ, ລຳຕົ້ນຂອງພວກມັນບໍ່ທັນຈະຢັ່ງຮາກລົງໃນພື້ນດິນ, ເມື່ອພຣະອົງຊົງປາບພວກມັນແລະພວກມັນກໍຫ່ຽວແຫ້ງ,
ແລະລົມກໍພັດພວກມັນອອກໄປຄືກັບເຟືອງເຂົ້າ.
25ອົງບໍລິສຸດກ່າວວ່າ. ເມື່ອນັ້ນພວກເຈົ້າຈະປຽບທຽບເຮົາກັບຜູ້ໃດ, ມີໃຜແດ່ທີ່ສຳຄັນເຫມືອນພຣະອົງໄດ້?" 26ຈົ່ງເງີຍຫນ້າຂຶ້ນທ້ອງຟ້າ!
ໃຜໄດ້ສ້າງດວງດາວທັງຫມົດນີ້? ພຣະອົງນຳພາການອອກແບບຂອງພວກມັນອອກມາແລະເອີ້ນດວງດາວທັງຫມົດຕາມຊື່ຂອງມັນ.
ໂດຍຄວາມຍິ່ງໃຫຍ່ຂອງຣິດເດດຂອງພຣະອົງ, ແລະ ໂດຍກຳລັງຂອງຣິດທານຸພາບຂອງພຣະອົງ, ຈຶ່ງບໍ່ມີດວງດາວຈັກດວງຂາດຫາຍໄປ.
27ຢາໂຄບ, ເປັນຫຍັງເຈົ້າຈຶ່ງເວົ້າ, ແລະ ອິດສະຣາເອນ, "ເປັນຫຍັງເຈົ້າຈຶ່ງປະກາດວ່າ, "ທາງຂອງຂ້ານ້ອຍຖືກປິດບັງໄວ້ຈາກພຣະຢາເວ, ແລະ
ພຣະເຈົ້າຂອງຂ້ານ້ອຍຊົງບໍ່ສົນໃຈກ່ຽວກັບຄວາມຕ້ອງການຂອງຂ້ານ້ອຍບໍ່"? 28ພວກເຈົ້າບໍ່ເຄີຍຮູ້ຈັກບໍ? ພວກເຈົ້າບໍ່ເຄີຍໄດ້ຍິນບໍ? ພຣະຢາເວ,
ຊົງເປັນພຣະເຈົ້ານິລັນດອນ, ຜູ້ຊົງສ້າງທີ່ສຸດປາຍແຜ່ນດິນໂລກ, ຜູ້ບໍ່ຊົງອິດເມື່ອຍຫລືອ່ອນເພຍ; ຄວາມເຂົ້າໃຈຂອງພຣະອົງບໍ່ມີຂີດຈຳກັດ.
29ພຣະອົງປະທານກຳລັງໃຫ້ແກ່ຄົນທີ່ອິດເມື່ອຍ; ແລະ ປະທານເຫື່ອແຮງໃຫ້ຄົນທີ່ອ່ອນແອ. 30ແມ່ນແຕ່ຄົນຫນຸ່ມສາວບາງຄົນຈະອິດເມື່ອຍ ແລະ
ອ່ອນເພຍ, ແລະ ຄົນຫນຸ່ມສາວຈະສະດຸດແລະລົ້ມລົງ. 31ແຕ່ຄົນເຫລົ່ານັ້ນທີ່ລໍຄອຍພຣະຢາເວຈະໄດ້ຮັບກຳລັງໃຫມ່;
ພວກເຂົາຈະບິນຂຶ້ນດ້ວຍປີກເຫມືອນນົກອິນຊີ; ພວກເຂົາຈະແລ່ນ ແລະ ບໍ່ອ່ອນເພຍ; ພວກເຂົາຈະຍ່າງ ແລະ ບໍ່ອິດເມື່ອຍ.

 generated on Tue Jun 17 19:01:42 2025

41 [1]"ແຜ່ນດິນຊາຍຝັ່ງທະເລເອີຍ, ຈົ່ງຟັງແລະມິດງຽບຕໍ່ຫນ້າເຮົາ; ຈົ່ງໃຫ້ປະຊາຊາດສ້າງຄວາມເຂັ້ມແຂງຂຶ້ນໃຫມ່;
ຈົ່ງໃຫ້ພວກເຂົາເຂົ້າມາໃກ້ ແລະ ໃຫ້ພວກເຂົາເວົ້າ; ຂໍໃຫ້ພວກເຮົາເຂົ້າມາໃກ້ກັນເພື່ອໂຕ້ຖຽງກັນຂໍ້ພິພາກສາ.
[2]ຜູ້ໃດໄດ້ປຸກລະດົມຄົນຜູ້ຫນຶ່ງມາຈາກທິດຕາເວັນອອກ, ແລະເອີ້ນທ່ານດ້ວຍຄວາມຊອບທໍາ ມາເພື່ອເຮັດຫນ້າທີ່ຂອງທ່ານ?
ພຣະອົງຊົງມອບບັນດາປະຊາຊາດໃຫ້ແກ່ທ່ານແລະຊ່ວຍລາວໃນການໂຄ່ນລົ້ມກະສັດ. ທ່ານເຮັດໃຫ້ພວກເຂົາເປັນຂີ້ຝຸ່ນດ້ວຍດາບຂອງທ່ານ,
ຄືກັບຕໍເຂົ້າທີ່ປິວໄປດ້ວຍຄັນທະນູຂອງທ່ານ.

[3]ທ່ານໄລ່ຕິດຕາມພວກເຂົາແລະຜ່ານໄປດ້ວຍຄວາມປອດໄພ, ໂດຍເສັ້ນທາງທີ່ວ່ອງໄວທີ່ຕີນຂອງທ່ານເກືອບບໍ່ໄດ້ຢຽບລົງໄປ.
[4]ໃຜໄດ້ປະຕິບັດແລະເຮັດສິ່ງເຫລົ່ານີ້ສໍາເລັດ? ຜູ້ໃດໄດ້ເອີ້ນຄົນທຸກຊົນຊາດຕັ້ງແຕ່ປະຖົມມະການ? ເຮົາ, ພຣະຢາເວ, ຜູ້ເປັນເບື້ອງຕົ້ນ ແລະ
ເປັນເບື້ອງປາຍ, ເຮົາແມ່ນຜູ້ນັ້ນ.
[5]ແຜ່ນດິນທັງຫລາຍໄດ້ເຫັນແລະຢ້ານກົວ; ສຸດປາຍແຜ່ນດິນໂລກສັ່ນສະເທືອນ; ພວກເຂົາຫຍັບມາໃກ້ແລະເຂົ້າມາ.
[6]ທຸກຄົນຊ່ວຍເພື່ອນບ້ານຂອງຕົນ, ແລະທຸກຄົນເວົ້າແກ່ກັນແລະກັນວ່າ, 'ຈົ່ງເຂັ້ມແຂງເຖີດ.'[7]ດັ່ງນັ້ນຊ່າງໄມ້ກໍໃຫ້ກໍາລັງໃຈຊ່າງຄໍາ,
ແລະຜູ້ທີ່ເຮັດວຽກກັບໄມ້ຄ້ອນກໍໃຫ້ກໍາລັງໃຈຄົນທີ່ເຮັດວຽກກັບທັ່ງຕີເຫລັກ, ໂດຍກ່າວເຖິງການເຊື່ອມໂລຫະວ່າ, 'ດີແລ້ວ.'
ພວກເຂົາເຮັດໃຫ້ມັນຫມັ້ນຄົງດ້ວຍຕະປູພື່ອບໍ່ໃຫ້ມັນລົ້ມລົງ
[8]ແຕ່ວ່າເຈົ້າ, ອິດສະຣາເອນ, ຜູ້ຮັບໃຊ້ຂອງເຮົາ, ຢາໂຄບຜູ້ທີ່ເຮົາໄດ້ເລືອກໄວ້, ແມ່ນເຊື້ອສາຍຂອງອັບຣາຮາມສະຫາຍຂອງເຮົາ.
[9]'ເຈົ້າຜູ້ທີ່ເຮົານໍາມາຈາກທີ່ສຸດປາຍແຜ່ນດິນໂລກ, ແລະຜູ້ທີ່ເຮົາໄດ້ເອີ້ນຈາກບ່ອນຫ່າງໄກ, ແລະຜູ້ທີ່ເຮົາໄດ້ເວົ້າວ່າ,
'ເຈົ້າເປັນຜູ້ຮັບໃຊ້ຂອງເຮົາ;' ເຮົາໄດ້ເລືອກເຈົ້າແລ້ວແລະບໍ່ໄດ້ປະຕິເສດເຈົ້າ.
[10]ຢ່າຢ້ານເລີຍ, ເພາະເຮົາຢູ່ກັບເຈົ້າ. ຢ່າຕົກໃຈ. ເພາະເຮົາເປັນພຣະເຈົ້າຂອງເຈົ້າ, ເຮົາຈະເສີມກໍາລັງຂອງເຈົ້າ, ເຮົາຈະຊ່ວຍເຈົ້າ
ແລະເຮົາຈະຊູເຈົ້າດ້ວຍມືຂວາອັນຊອບທໍາຂອງເຮົາ.
[11]ເບິ່ງແມ, ທຸກຄົນທີ່ຄຽດແຄ້ນຕໍ່ເຈົ້າພວກເຂົາຈະອັບອາຍແລະຂາຍຫນ້າ,
ພວກຄົນທີ່ບີບບັງຄັບເຈົ້າພວກເຂົາຈະກາຍເປັນຄວາມວ່າງເປົ່າແລະພິນາດ.
[12]ເຈົ້າຈະຊອກຫາ ແລະ ຈະບໍ່ພົບພວກຄົນທີ່ຕໍ່ສູ້ກັບເຈົ້າ; ພວກຄົນທີ່ເຮັດສົງຄວາມກັບເຈົ້າຈະເປັນຄືຄວາມວ່າງເປົ່າບໍ່ມີເຫລືອຢູ່ເລີຍ.
[13]ເພາະເຮົາ, ຄືພຣະຢາເວພຣະເຈົ້າຂອງເຈົ້າ, ຈະຊູມືຂວາຂອງເຈົ້າ, ແລະ ກ່າວກັບເຈົ້າວ່າ, 'ຢ່າສູ່ຢ້ານ; ເຮົາກໍາລັງຊ່ວຍເຈົ້າ. '
[14]ຢ່າຢ້ານກົວເລີຍ, ຢາໂຄບ, ແລະພວກອິດສະຣາເອນ; ເຮົາຈະຊ່ວຍເຈົ້ານີ້ແມ່ນ ຄໍາ ປະກາດຂອງພຣະຢາເວ, ພຣະຜູ້ໄຖ່ຂອງເຈົ້າ,
ອົງບໍລິສຸດຂອງອິດສະຣາເອນ.[15]ຈົ່ງເບິ່ງ, ເຮົາກໍາລັງເຮັດໃຫ້ເຈົ້າເຫມືອນດັ່ງແປ້ນຟາດເຂົ້າທີ່ທັງຄົມ, ທັງໃຫມ່ ແລະມີສອງຄົມ;
ເຈົ້າຈະຟາດແລະທໍາລາຍພູເຂົາທັງຫລາຍລົງ; ເຈົ້າຈະເຮັດໃຫ້ເນີນພູມຸ່ນທະລາຍກາຍເປັນຂີ້ຝຸ່ນໄປທັງສິ້ນ.
[16]ເຈົ້າຈະເຮັດໃຫ້ເນີນເຂົາທັງຫຼາຍເປັນເຫມືອນຂີ້ແກບ; ເຈົ້າຈະຝັດຮ່ອນພວກມັນ,
ແລະລົມກໍຈະພັດມັນໄປເສຍລົມຈະເຮັດໃຫ້ພວກມັນກະຈັດກະຈາຍໄປ, ເຈົ້າຈະປິຕິຍິນດີໃນພຣະຢາເວ,
ເຈົ້າຈະຊົມຊື່ນຍິນດີໃນອົງບໍລິສຸດຂອງອິດສະຣາເອນ.
[17]ຄົນທີ່ຖືກກົດຂີ່ຂົ່ມເຫັງແລະຄົນຂັດສົນສະແຫວງຫານ້ຳ, ແຕ່ມັນບໍ່ມີ, ແລະລີ້ນຂອງພວກເຂົາກໍແຕກແຫ້ງເພາະຄວາມຫິວກະຫາຍ; ເຮົາ,
ພຣະຢາເວ, ຈະຕອບຄໍາອະທິຖານຂອງພວກເຂົາ; ເຮົາ, ພຣະເຈົ້າຂອງອິດສະຣາເອນ, ຈະບໍ່ປະຖິ້ມພວກເຂົາ.
[18]ເຮົາຈະເຮັດໃຫ້ກະແສນ້ຳໄຫລລົງມາຕາມເນີນພູ, ແລະ ນ້ຳທີ່ໄຫລອອກມາຢູ່ກາງຮ່ອມພູ; ເຮົາຈະເຮັດໃຫ້ທະເລຊາຍກາຍເປັນຫນອງນ້ຳ,
ແລະ ດິນແຫ້ງແລ້ງໃຫ້ກາຍເປັນນ້ຳພຸໄຫລອອກມາ.
[19]ເຮົາຈະໃຫ້ຕົ້ນແປກເກີດໃນຖິ່ນແຫ້ງແລ້ງກັນດານ, ຕົ້ນກະຖິນເທດ, ແລະ ຕົ້ນນ້ຳມັນຫອມ, ແລະ ຕົ້ນຫມາກກອກເທດ.
ເຮົາຈະວາງຕົ້ນສົນຢູ່ທົ່ງພຽງທະເລຊາຍ, ໂດຍມີຕົ້ນໄມ້ແປກແລະໄມ້ປ່ອງ.[20]ເຮົາຈະເຮັດສິ່ງນີ້ເພື່ອປະຊາຊົນຈະໄດ້ເຫັນ, ຮັບຮູ້ ແລະ
ເຂົ້າໃຈດ້ວຍກັນວ່າພຣະຫັດຂອງ ພຣະຢາເວ ໄດ້ເຮັດສິ່ງນີ້, ອົງບໍລິສຸດຂອງອິດສະຣາເອນໄດ້ສ້າງສິ່ງນີ້.
[21]ພຣະຢາເວກ່າວວ່າ, "ຈົ່ງນໍາຄະດີຂອງເຈົ້າມາ," ກະສັດຢາໂຄບກ່າວວ່າ:
"ຈົ່ງສະເຫນີການໂຕ້ຖຽງທີ່ດີທີ່ສຸດຂອງເຈົ້າສໍາລັບຮູບເຄົາລົບຂອງເຈົ້າມາ, "[22]ຢ່າໃຫ້ພວກເຂົາໂຕ້ຖຽງກັນເອງ;
ໃຫ້ພວກເຂົາກ້າວອອກມາທາງຫນ້າ ແລະປະກາດກັບພວກເຮົາວ່າຈະມີຫຍັງເກີດຂຶ້ນ, ເພື່ອພວກເຮົາອາດຈະຮູ້ເລື່ອງເຫລົ່ານີ້ໄດ້ດີ.
ໃຫ້ພວກເຂົາບອກພວກເຮົາກ່ຽວກັບການປະກາດທີ່ໄດ້ທໍານວາຍໄວ້ກ່ອນຫນ້ານີ້,
ເພື່ອພວກເຮົາຈະໄດ້ໄຕ່ຕອງຄໍາປະກາດເຫລົ່ານັ້ນແລະຮູ້ວ່າຄໍາປະກາດເຫລົ່ານັ້ນສໍາເລັດໄດ້ຢ່າງໃດ.
[23]ຈົ່ງບອກເລື່ອງຕ່າງໆກ່ຽວກັບອະນາຄົດ, ເພື່ອໃຫ້ພວກເຮົາໄດ້ຮູ້ຖ້າວ່າພວກທ່ານເປັນເທບພະເຈົ້າ; ເຮັດບາງສິ່ງທີ່ດີຫລືຊົ່ວຮ້າຍ,
ເພື່ອວ່າພວກເຮົາຈະໄດ້ຮັບຄວາມຢ້ານກົວແລະຈົດຈໍາ.[24]ຈົ່ງເບິ່ງ, ຮູບເຄົາລົບຂອງພວກເຈົ້າກໍຫວ່າງເປົ່າ ແລະ
ການກະທໍາຂອງເຈົ້າພວກກໍຫວ່າງເປົ່າ; ຄົນທີ່ເລືອກພວກເຈົ້າກໍຫນ້າລັງກຽດ.
[25]ເຮົາໄດ້ໃຫ້ຄົນຫນຶ່ງຂຶ້ນມາຈາກພາກເຫນືອ, ແລະລາວໄດ້ມາແລ້ວ; ເຮົາເອີ້ນຜູ້ທີ່ຮ້ອງອອກຫານາມຂອງເຮົາຈາກທາງຕາເວັນຂຶ້ນ,
ແລະລາວຈະຢຽບຢ່ໍາບັນດາຜູ້ປົກຄອງຄືກັບຂີ້ຕົມ, ຄືກັບຊ່າງປັ້ນຫມໍ້ທີ່ກໍາລັງຢຽບດິນຫນຽວ.[26]ຜູ້ໃດປະກາດເລື່ອງນີ້ໄວ້ຕັ້ງແຕ່ປະຖົມມະການ,
ເພື່ອພວກເຮົາຈະໄດ້ຮູ້? ກ່ອນເວລານີ້, ເພື່ອພວກເຮົາຈະເວົ້າວ່າ, "ທ່ານເວົ້າຖືກ" ແທ້ຈິງແລ້ວບໍ່ມີໃຜໃນພວກເຂົາໄດ້ອອກ ຄໍາສັ່ງດັ່ງກ່າວ,
ແມ່ນແລ້ວ, ບໍ່ມີໃຜໄດ້ຍິນວ່າເຈົ້າເວົ້າຫຍັງ.
[27]ເຮົາໄດ້ກ່າວກັບຊີໂອນເທື່ອທໍາອິດວ່າ,“ ເບິ່ງນີ້ພວກເຂົາຢູ່ບ່ອນນີ້;” ເຮົາໄດ້ສົ່ງຜູ້ສົ່ງຂ່າວໄປເຢຣູຊາເລັມ.[28]ເມື່ອເຮົາຫລຽວເບິ່ງ, ກໍບໍ່ມີໃຜເລີຍ,
ບໍ່ມີໃຜຈັກຄົນໃນພວກເຂົາທີ່ສາມາດໃຫ້ຄໍາປຶກສາທີ່ດີໄດ້, ໃນເມື່ອເຮົາຖາມ, ໃຜທີ່ສາມາດຕອບຄໍາຖາມໄດ້.[29]ຈົ່ງເບິ່ງ,
ພວກເຂົາທຸກຄົນກໍຫວ່າງເປົ່າ, ແລະການກະທໍາຂອງພວກເຂົາບໍ່ມີຫຍັງເລີຍ; ຮູບຫລໍ່ໂລຫະຂອງພວກເຂົາກໍເປັນແຕ່ລົມແລະຄວາມຫວ່າງເປົ່າ.

 generated on Tue Jun 17 19:01:42 2025

42 [1]ຈົ່ງເບິ່ງ, ຜູ້ຮັບໃຊ້ຂອງເຮົາ, ຜູ້ທີ່ເຮົາສະຫນັບສະຫນູນ; ຜູ້ທີ່ເລືອກສັນຂອງເຮົາ, ຜູ້ທີ່ເຮົາປິຕິຍິນດີໃນເຂົາ..
ເຮົາໄດ້ເອົາວິນຍານຂອງເຮົາໃສ່ໄວ້ໃນເຂົາ; ເຂົາຈະນຳຄວາມຍຸດຕິທຳມາສູ່ປະຊາຊາດທັງຫລາຍ.[2]ເຂົາຈະບໍ່ຮ້ອງ ແລະ ບໍ່ສົ່ງສຽງດັງ,
ແລະ ຈະບໍ່ສົ່ງສຽງຂອງລາວອອກໄປຕາມຖະຫນົນ.

[3]ຕົ້ນອໍ້ຊໍ້າແລ້ວເຂົາຈະບໍ່ຫັກ, ແລະ ໄສ້ຕະກຽງທີ່ໃກ້ຈະຫມົດເຂົາຈະບໍ່ດັບ, ເຂົາຈະປະຕິບັດຄວາມຍຸດຕິທຳຢ່າງສັດຊື່.
[4]ເຂົາຈະບໍ່ອ່ອນເພຍຫລືທໍ້ຖອຍໃຈຈົນກວ່າເຂົາຈະໄດ້ສ້າງຄວາມຍຸດຕິທຳເທິງແຜ່ນດິນໂລກ; ແລະຊາຍຝັ່ງທະເລລໍຖ້າກົດບັນຍັດຂອງເຂົາ.
[5]ນີ້ຄືສິ່ງທີ່ພຣະຢາເວພຣະເຈົ້າ - ຜູ້ທີ່ສ້າງຟ້າສະຫວັນແລະຄຶງພວກມັນໄວ້, ເປັນຜູ້ສ້າງແຜ່ນດິນໂລກ ແລະ ທຸກສິ່ງທີ່ບັງເກີດຂຶ້ນໃນໂລກ,
ຜູ້ທີ່ປະທານລົມຫາຍໃຈແກ່ຜູ້ຄົນທັງປວງເທິງໂລກ, ແລະ ຜູ້ທີ່ປະທານຊີວິດໃຫ້ແກ່ພວກຄົນທີ່ອາໄສຢູ່ເທິງແຜ່ນດິນໂລກ ກ່າວດັ່ງນີ້:[6]ເຮົາ,
ຄືພຣະຢາເວ, ໄດ້ເອີ້ນເຈົ້າມາດ້ວຍຄວາມຊອບທຳ ແລະ ຈະຈັບມືຂອງເຈົ້າໄວ້ ແລະ ຕັ້ງເຈົ້າໄວ້ເປັນເຫມືອນພັນທະສັນຍາແກ່ຊົນຊາດນັ້ນ,
ເປັນແສງສະຫວ່າງແກ່ຄົນຕ່າງດ້າວ,
[7]ເພື່ອເປີດຕາຂອງຄົນຕາບອດ, ເພື່ອປົດປ່ອຍນັກໂທດທັງຫລາຍອອກຈາກຄຸກ, ແລະປົດປ່ອຍພວກຄົນທີ່ນັ່ງຢູ່ໃນຄວາມມືດຈາກເຮືອນຈຳ.
[8]ເຮົາຄືພຣະຢາເວ, ນັ້ນຄືນາມຂອງເຮົາ;
ແລະເຮົາຈະບໍ່ໃຫ້ສະຫງ່າຣາສີຂອງເຮົາແກ່ຄົນອື່ນຫລືບໍ່ໃຫ້ການສັນລະເສີນຂອງເຮົາແກ່ຮູບເຄົາລົບແກະສະຫລັກ.[9]ເບິ່ງແມ,
ສິ່ງເກົ່າກໍໄດ້ລ່ວງເລີຍໄປ, ບັດນີ້ ເຮົາຈະປະກາດເຖິງສິ່ງໃຫມ່ໆ. ກ່ອນທີ່ສິ່ງເຫລົ່ານັ້ນຈະເກີດຂຶ້ນເຮົາ ຈະບອກສິ່ງເຫລົ່ານັ້ນແກ່ເຈົ້າ."
[10]ຈົ່ງຮ້ອງເພງບົດໃຫມ່ຖວາຍແດ່ພຣະຢາເວ, ແລະ ຮ້ອງເພງສັນລະເສີນພຣະອົງຈາກສຸດປາຍແຜ່ນດິນໂລກ; ພວກເຈົ້າຜູ້ທີ່ລົງໄປທະເລ, ແລະ
ທຸກສິ່ງທີ່ອາໄສຢູ່ໃນນັ້ນ, ທັງແຜ່ນດິນແຄມທະເລ, ແລະ ຄົນທັງຫລາຍທີ່ອາໄສຢູ່ທີ່ນັ້ນ.[11]ຈົ່ງໃຫ້ທະເລຊາຍ ແລະເມືອງທັງຫລາຍເປັ່ງສຽງຮ້ອງ,
ບັນດາຫມູ່ບ້ານທີ່ເຊິ່ງຄົນເມືອງເກດາດຳລົງຊີວິດ, ຈົ່ງໂຫ່ຮ້ອງດ້ວຍຄວາມຍິນດີ! ຈົ່ງໃຫ້ຊາວເມືອງເສລາຮ້ອງເພງ;
ໃຫ້ພວກເຂົາໂຫ່ຮ້ອງຈາກພູເຂົາທັງຫລາຍ.
[12]ຂໍໃຫ້ພວກເຂົາຖວາຍພຣະສີລິແດ່ພຣະຢາເວ ແລະ ປະກາດຄຳສັນລະເສີນພຣະອົງໃນເຂດແຄມຝັ່ງທະເລ.
[13]ພຣະຢາເວຈະສະເດັດອອກໄປຢ່າງນັກຮົບ; ພຣະອົງຈະກະຕຸ້ນຄວາມກະຕືລືລົ້ນຂອງພຣະອົງຄືກັບເປັນຄົນແຫ່ງສົງຄາມ.
ພຣະອົງຈະເປັ່ງພຣະສຸລະສຽງ, ແມ່ນແລ້ວ, ພຣະອົງຈະເປັ່ງສຽງຮ້ອງຂອງພຣະອົງອອກໄປ;
ພຣະອົງຈະຊົງສະແດງຣິດທານຸພາບຂອງພຣະອົງຕໍ່ສັດຕູຂອງພຣະອົງ.
[14]ເຮົາໄດ້ມິດງຽບມາເປັນເວລາດົນນານແລ້ວ; ເຮົາຍັງໄດ້ຢຸດແລະຍັບຍັ້ງຕົນເອງໄວ້; ບັດນີ້, ເຮົາຈະຮ້ອງອອກມາຄືກັບແມ່ຍິງທີ່ກຳລັງອອກລູກ;
ແລະຫາຍໃຈຖີ່ແລະຫອບ.[15]ເຮົາຈະເຮັດໃຫ້ພູເຂົາແລະເນີນພູທັງຫລາຍຮ້າງເປົ່າແລະເຮັດໃຫ້ພືດຜັກຂອງພວກເຂົາຫ່ຽວແຫ້ງໄປ;
ແລະເຮົາຈະປ່ຽນແມ່ນ້ຳໃຫ້ເປັນເກາະຕ່າງໆແລະຈະເຮັດໃຫ້ນ້ຳເຫືອດແຫ້ງໄປ.
[16]ເຮົາຈະນຳຄົນຕາບອດໄປຕາມທາງທີ່ພວກເຂົາບໍ່ຮູ້ຈັກ; ເຮົາຈະພາພວກເຂົາໄປໃນເສັ້ນທາງທີ່ພວກເຂົາບໍ່ຮູ້ຈັກ.
ເຮົາຈະເຮັດໃຫ້ຄວາມມືດເປັນຄວາມສະຫວ່າງຕໍ່ຫນ້າພວກເຂົາ, ແລະເຮັດໃຫ້ທີ່ຄົດງໍໃຫ້ຊື່ຕົງ. ເຮົາຈະເຮັດສິ່ງເຫລົ່ານີ້,
ແລະເຮົາຈະບໍ່ປະຖິ້ມພວກເຂົາ.
[17]ພວກເຂົາຈະກັບຄືນໄປ, ພວກເຂົາຈະອັບອາຍຢ່າງທີ່ສຸດ, ຄືຜູ້ທີ່ໄວ້ວາງໃຈໃນຮູບເຄົາລົບແກະສະຫລັກ, ຜູ້ທີ່ເວົ້າກັບຮູບຫລໍ່ໂລຫະວ່າ,
"ທ່ານທັງຫລາຍແມ່ນພະເຈົ້າຂອງພວກເຮົາ."
[18]ເຈົ້າພວກຄົນຫູຫນວກ, ຈົ່ງຟັງ, ແລະພວກເຈົ້າຄົນຕາບອດຈົ່ງເບິ່ງ, ເພື່ອພວກເຈົ້າຈະໄດ້ເຫັນ.
[19]ຜູ້ໃດເປັນຄົນຕາບອດບໍ່ແມ່ນຜູ້ຮັບໃຊ້ຂອງເຮົາບໍ? ຫລືໃຜທີ່ເປັນຄົນຫູຫນວກເຫມືອນກັບຜູ້ສົ່ງຂ່າວສານຂອງເຮົາທີ່ເຮົາສົ່ງໄປບໍ?
ຜູ້ທີ່ຕາບອດເຫມືອນກັບຜູ້ທີ່ມີສ່ວນຮ່ວມງານພັນທະສັນຍາຂອງເຮົາ, ຫລືຄົນຕາບອດຄືຜູ້ຮັບໃຊ້ຂອງພຣະຢາເວ?
[20]ພວກເຈົ້າເຫັນຫລາຍຢ່າງ, ແຕ່ບໍ່ເຂົ້າໃຈ; ຫູກໍເປີດອອກ, ແຕ່ບໍ່ມີໃຜໄດ້ຍິນ.[21]ສິ່ງທີ່ພຣະຢາເວຊົງພໍພຣະໄທຄືການສັນລະເສີນຄວາມຍຸຕິທຳ
ຂອງພຣະອົງແລະເຮັດໃຫ້ກົດບັນຍັດຂອງພຣະອົງໄດ້ຮັບກຽດ.
[22]ແຕ່ນີ້ແມ່ນຊົນຊາດທີ່ຖືກລັກ ແລະ ປຸ້ນຈີ້; ພວກເຂົາທັງຫມົດຕິດກັບດັກໃນຂຸມ, ຖືກຈັບຢູ່ໃນຄຸກ;
ພວກເຂົາໄດ້ກາຍມາເປັນຂອງທີ່ຖືກຍຶດທີ່ບໍ່ມີໃຜຊ່ວຍພວກເຂົາ, ແລະບໍ່ມີຜູ້ໃດເວົ້າວ່າ, "ຈົ່ງນຳພວກເຂົາກັບຄືນມາ!"
[23]ໃນບັນດາພວກເຈົ້າຜູ້ໃດຈະຟັງເລື່ອງນີ້? ໃຜຈະຟັງແລະໄດ້ຍິນໃນອະນາຄົດ?[24]ຜູ້ໃດມອບຢາໂຄບໃຫ້ແກ່ພວກໂຈນ,
ແລະມອບຄົນອິດສະຣາເອນໃຫ້ແກ່ພວກໂຈນປຸ້ນ? ບໍ່ແມ່ນພຣະຢາເວ, ຜູ້ທີ່ພວກເຮົາໄດ້ເຮັດຜິດຕໍ່ພຣະອົງ,
ຜູ້ເຊິ່ງພວກເຂົາປະຕິເສດທີ່ຈະດຳເນີນໄປໃນທາງຂອງພຣະອົງ, ແລະປະຕິເສດທີ່ຈະເຊື່ອຟັງພຣະບັນຍັດຂອງພຣະອົງບໍ?
[25]ເພາະສະນັ້ນພຣະອົງຈຶ່ງຊົງເທພຣະພິໂລດຮ້າຍແຮງລົງມາເທິງຂອງພວກເຂົາ, ດ້ວຍສົງຄາມແຫ່ງການທຳລາຍລ້າງ.
ມັນເຮັດໃຫ້ພວກເຂົາມີໄຟອ້ອມຕົວພວກເຂົາ, ແຕ່ພວກເຂົາກໍບໍ່ຮັບຮູ້ມັນ; ມັນໄດ້ເຜົາໄຫມ້ພວກເຂົາ, ແຕ່ພວກເຂົາບໍ່ຍອມເອົາໃຈໃສ່.

 generated on Tue Jun 17 19:01:42 2025

43 [1]ແຕ່ບັດນີ້ ຢາໂຄບເອີຍ ນີ້ຄືສິ່ງທີ່ພຣະຢາເວ, ພຣະອົງຜູ້ໄດ້ຊົງສ້າງເຈົ້າ, ແລະອິດສະຣາເອນເອີຍ ພຣະອົງຜູ້ໄດ້ຊົງປັ້ນເຈົ້າກ່າວວ່າ:
"ຢ່າຢ້ານເລີຍ, ເພາະວ່າເຮົາໄດ້ໄຖ່ເຈົ້າ; ເຮົາໄດ້ເອີ້ນເຈົ້າຕາມຊື່ຂອງເຈົ້າ, ເຈົ້າເປັນຂອງເຮົາ.

[2]ເມື່ອເຈົ້າຍ່າງຂ້າມນ້ຳ, ເຮົາຈະຢູ່ກັບເຈົ້າ; ແລະເມື່ອຂ້າມແມ່ນ້ຳທັງຫລາຍ, ນ້ຳກໍຈະບໍ່ໄຫລຖ້ວມເຈົ້າ.
ເມື່ອເຈົ້າຍ່າງຜ່ານໄຟເຈົ້າຈະບໍ່ຖືກເຜົາໄຫມ້, ແລະແປວໄຟຈະບໍ່ທຳລາຍເຈົ້າ.[3]ເພາະວ່າເຮົາແມ່ນພຣະຢາເວພຣະເຈົ້າຂອງເຈົ້າ,
ອົງບໍລິສຸດຂອງອິດສະຣາເອນ, ພຣະຜູ້ຊ່ອຍໃຫ້ພົ້ນຂອງເຈົ້າ. ເຮົາໄດ້ໃຫ້ປະເທດເອຢິບເປັນຄ່າໄຖ່ຂອງເຈົ້າ, ໃຫ້ເອທິໂອເປຍ ແລະ
ເສບາເປັນການແລກປ່ຽນກັບເຈົ້າ.
[4]ເພາະວ່າເຈົ້າມີຄ່າແລະພິເສດໃນສາຍຕາຂອງເຮົາ, ເຮົາຮັກເຈົ້າ; ສະນັ້ນເຮົາຈະໃຫ້ຊົນຊາດນັ້ນເພື່ອແລກປ່ຽນກັບເຈົ້າ,
ແລະຊົນຊາດອື່ນໆເພື່ອແລກກັບຊີວິດຂອງເຈົ້າ.[5]ຢ່າຢ້ານກົວເລີຍ, ເພາະວ່າເຮົາຢູ່ກັບເຈົ້າ;
ເຮົານຳເອົາລູກຫລານຂອງເຈົ້າມາຈາກທິດຕາເວັນອອກແລະຈະເຕົ້າໂຮມເຈົ້າຈາກທິດຕາເວັນຕົກ.
[6]ເຮົາຈະເວົ້າກັບເຂດພາກເຫນືອວ່າ, 'ຈົ່ງມອບພວກເຂົາມາ; ແລະເວົ້າກັບທາງທິດໃຕ້ວ່າ, 'ຢ່າຢຶດໃຜໄວ້;
'ຈົ່ງນຳເອົາລູກຊາຍຂອງເຮົາຈາກແດນໄກ, ແລະລູກສາວຂອງເຮົາມາຈາກເຂດຫ່າງໄກຂອງແຜ່ນດິນໂລກ,
[7]ທຸກຄົນຜູ້ເຊິ່ງເຮົາໄດ້ເອີ້ນໂດຍຊື່ຂອງເຮົາ, ຜູ້ທີ່ເຮົາໄດ້ສ້າງຂຶ້ນເພື່ອພຣະສິຣິຂອງເຮົາ, ຜູ້ທີ່ເຮົາໄດ້ປັ້ນ, ແມ່ນແລ້ວ, ຜູ້ທີ່ເຮົາໄດ້ສ້າງໄວ້.
[8]ຈົ່ງນຳຄົນທີ່ຕາບອດອອກມາ, ເຖິງແມ່ນວ່າພວກເຂົາມີຕາ, ແລະນຳຄົນຫູຫນວກອອກມາ, ເຖິງແມ່ນວ່າພວກເຂົາມີຫູ.
[9]ປະຊາຊາດທັງຫມົດໄດ້ມາຊຸມນຸມກັນ, ແລະຊົນຊາດທັງຫລາຍໄດ້ມາປະຊຸມກັນ.
ມີຜູ້ໃດໃນບັນດາພວກເຂົາທີ່ໄດ້ແຈ້ງເລື່ອງນີ້ແລະບອກເຫດການກ່ອນຫນ້ານີ້ແກ່ເຮົາໄດ້?
ໃຫ້ພວກເຂົານຳເອົາພະຍານຂອງພວກເຂົາມາພິສູດດ້ວຍຕົນເອງ, ໃຫ້ພວກເຂົາຟັງແລະຢືນຢັນວ່າ 'ມັນແມ່ນຄວາມຈິງ.'
[10]ພວກເຈົ້າເປັນພະຍານຂອງເຮົາ," ພຣະຢາເວຊົງປະກາດວ່າ, "ແລະຜູ້ຮັບໃຊ້ຂອງເຮົາເຊິ່ງເຮົາໄດ້ເລືອກໄວ້,
ເພື່ອພວກເຈົ້າຈະໄດ້ຮູ້ຈັກແລະເຊື່ອໃນເຮົາ, ແລະເຂົ້າໃຈວ່າເຮົາແມ່ນຜູ້ນັ້ນ. ກ່ອນຫນ້າເຮົາຈະບໍ່ມີເທບພະເຈົ້າອົງໃດຖືກປັ້ນຂຶ້ນມາ,
ແລະພາຍຫລັງເຮົາກໍຈະບໍ່ມີອີກເລີຍ.[11]ເຮົາເອງ, ເຮົາຄືພຣະຢາເວ, ແລະບໍ່ມີພຣະຜູ້ຊ່ອຍໃຫ້ລອດອື່ນໃດນອກຈາກເຮົາ.
[12]ເຮົາໄດ້ແຈ້ງໃຫ້ຮູ້, ໄດ້ຊ່ວຍໃຫ້ລອດ, ແລະໄດ້ປະກາດໃຫ້ຮູ້ ແລະ ບໍ່ມີພະເຈົ້າອື່ນໃດທ່າມກາງພວກເຈົ້າ. ພວກເຈົ້າເປັນພະຍານຂອງເຮົາ,"
ພຣະຢາເວຊົງປະກາດດັ່ງນີ້ວ່າ, "ເຮົາຄືພຣະເຈົ້າ.[13]ຕັ້ງແຕ່ມື້ນີ້ເປັນຕົ້ນໄປເຮົາເປັນຜູ້ນັ້ນ, ແລະ
ບໍ່ມີໃຜສາມາດຊ່ວຍຄົນໃດໃຫ້ລອດຈາກມືຂອງເຮົາໄດ້. ເຮົາກະທຳການ, ແລະ ໃຜຈະເຮັດໃຫ້ມັນກັບຄືນມາໄດ້?"
[14]ນີ້ແມ່ນສິ່ງທີ່ພຣະຢາເວ, ພຣະຜູ້ໄຖ່ຂອງພວກເຈົ້າ, ອົງບໍລິສຸດຂອງອິດສະຣາເອນຊົງກ່າວວ່າ: "ເພາະເຫັນແກ່ພວກເຈົ້າເຮົາຈະສົ່ງໄປບາບີໂລນ
ແລະ ນຳພວກເຂົາທັງຫມົດໃຫ້ເປັນພວກຜູ້ລີ້ໄພ, ແລະ
ປ່ຽນສຽງແຫ່ງຄວາມຊື່ນຊົມຍິນດີຂອງຊາວບາບີໂລນໃຫ້ເປັນບົດເພງແຫ່ງຄວາມໂສກເສົ້າ.[15]ເຮົາແມ່ນພຣະຢາເວ, ອົງບໍລິສຸດຂອງພວກເຈົ້າ,
ພຣະຜູ້ສ້າງຂອງອິດສະຣາເອນ, ເປັນກະສັດຂອງພວກເຈົ້າ."
[16]ນີ້ແມ່ນສິ່ງທີ່ພຣະຢາເວຊົງກ່າວວ່າ (ຜູ້ທີ່ໄດ້ເປີດທາງໄປສູ່ທະເລແລະເສັ້ນທາງໃນນ້ຳທີ່ໄຫລແຮງ,[17]ຜູ້ທີ່ໄດ້ນຳລົດຮົບແລະມ້າອອກມາ, ທະຫານ
ແລະ ກອງທັບທີ່ມີອຳນາດອອກມາ, ພວກເຂົາໄດ້ຈົມລົງໄປພ້ອມກັນ; ພວກເຂົາຈະບໍ່ໄດ້ຂຶ້ນມາອີກເລີຍ; ພວກເຂົາໄດ້ສູນສິ້ນໄປ
ມອດດັບໄປຄືໃສ້ຕະກຽງ.)
[18]"ຢ່າຄິດກ່ຽວກັບສິ່ງເກົ່າເຫລົ່ານີ້, ຢ່າຄິດເຖິງສິ່ງຕ່າງໆທີ່ດົນນານມາແລ້ວ.[19]ຈົ່ງເບິ່ງ, ເຮົາກຳລັງຈະເຮັດສິ່ງໃຫມ່ໆ,
ດຽວນີ້ມັນເລີ່ມຕົ້ນເກີດຂຶ້ນແລ້ວ, ເຈົ້າບໍ່ເຫັນສິ່ງນັ້ນບໍ? ເຮົາຈະສ້າງຫົນທາງໃນທະເລຊາຍແລະສາຍນ້ຳທັງຫລາຍໃນຖິ່ນທຸລະກັນດານ.
[20]ບັນດາສັດປ່າໃນທົ່ງຫຍ້າຈະໃຫ້ກຽດເຮົາ, ຫມາປ່າແລະນົກກະຈອກເທດ, ເພາະວ່າເຮົາໃຫ້ນ້ຳໃນຖິ່ນແຫ້ງແລ້ງກັນດານ,
ແລະແມ່ນ້ຳໃນທະເລຊາຍ, ເພື່ອສຳລັບຊົນຊາດທີ່ເຮົາເລືອກຈະໄດ້ດື່ມກິນ,[21]ຊົນຊາດນີ້ຜູ້ເຊິ່ງເຮົາໄດ້ປັ້ນເພື່ອເຮົາເອງ,
ເພື່ອພວກເຂົາຈະກ່າວຂານຄຳສັນລະເສີນເຮົາ.
[22]ແຕ່ເຈົ້າບໍ່ໄດ້ຮ້ອງຮຽກຫາເຮົາ, ຢາໂຄບ; ເຈົ້າບໍ່ໄດ້ອິດເມື່ອຍເພື່ອເຮົາເລີຍ, ອິດສະຣາເອນເອີຍ.
[23]ເຈົ້າບໍ່ໄດ້ນຳເອົາແກະໂຕໃດຂອງເຈົ້າມາເປັນເຄື່ອງເຜົາບູຊາຫລືຖວາຍກຽດເຮົາດ້ວຍເຄື່ອງບູຊາຂອງເຈົ້າ.
ເຮົາບໍ່ໄດ້ເຮັດໃຫ້ເຈົ້າແບກພາລະເລື່ອງເຄື່ອງບູຊາ, ຫລືເຮັດໃຫ້ເຈົ້າອິດເມື່ອຍດ້ວຍຄວາມຕ້ອງການເຄື່ອງຫອມ
ເຈົ້າບໍ່ໄດ້ນຳເງິນໄປຊື້ໄມ້ກິນຫອມມາ.
[24]ອີກທັງພວກເຈົ້າບໍ່ໄດ້ເອົາໄຂມັນຂອງເຄື່ອງບູຊາຂອງເຈົ້າມາໃຫ້ເຮົາ; ແຕ່ວ່າເຈົ້າເປັນພາລະແກ່ເຮົາດ້ວຍຄວາມບາບທັງຫລາຍຂອງເຈົ້າ,
ເຈົ້າໄດ້ເຮັດໃຫ້ເຮົາເບື່ອ ຫນ່າຍກັບການກະທຳທີ່ຊົ່ວຮ້າຍຂອງພວກເຈົ້າ.
[25]ເຮົາເອງ, ແມ່ນແລ້ວ, ເຮົາແມ່ນຜູ້ທີ່ລົບລ້າງການກະທຳຜິດຂອງເຈົ້າເພື່ອຜົນປະໂຫຍດຂອງເຮົາເອງ; ແລະ
ເຮົາຈະບໍ່ຈົດຈຳຄວາມບາບທັງຫລາຍຂອງເຈົ້າອີກຕໍ່ໄປ.[26]ຈົ່ງເຮັດໃຫ້ເຮົາລະນຶກເຖິງສິ່ງທີ່ເກີດຂຶ້ນຂໍໃຫ້ພວກເຮົາໂຕ້ຖຽງກັນ;
ນຳສະເຫນີເຫດຜົນຂອງທ່ານ, ເພື່ອວ່າເຈົ້າຈະພິສູດວ່າບໍລິສຸດ.
[27]ບັນພະບຸລຸດຄົນທຳອິດຂອງເຈົ້າໄດ້ເຮັດບາບ, ແລະພວກຜູ້ນຳຂອງເຈົ້າກໍໄດ້ເຮັດຜິດຕໍ່ເຮົາ.[28]ສະນັ້ນ,
ເຮົາຈະເຮັດໃຫ້ພວກເຈົ້ານາຍທີ່ບໍລິສຸດເປັນມົນທິນ; ເຮົາຈະມອບຢາໂຄບໃຫ້ເຮັດການທຳລາຍທີ່ສົມບູນ,
ແລະອິດສະຣາເອນກໍໃຫ້ແກ່ການດູຫມິ່ນທີ່ຫນ້າອັບປະຍົດອົດສູ."


generated on Tue Jun 17 19:01:42 2025

44 1ບັດນີ້ຈົ່ງຟັງ, ຢາໂຄບຜູ້ຮັບໃຊ້ຂອງເຮົາ, ແລະອິດສະຣາເອນ, ຜູ້ທີ່ເຮົາໄດ້ເລືອກໄວ້ 2ນີ້ແມ່ນສິ່ງທີ່ພຣະຢາເວ, ຜູ້ໄດ້ຊົງສ້າງເຈົ້າ ແລະ
ຊົງປັ້ນເຈົ້າຕັ້ງແຕ່ໃນທ້ອງ ແລະ ຜູ້ທີ່ຈະຊ່ວຍເຈົ້າໄດ້ກ່າວວ່າ: "ຢ່າຢ້ານເລີຍ, ຢາໂຄບຜູ້ຮັບໃຊ້ຂອງເຮົາ; ແລະເຈົ້າ, ເຢຊູຣູນ,
ຜູ້ທີ່ເຮົາໄດ້ຊົງເລືອກໄວ້.

3ເພາະເຮົາຈະຫົດນ້ຳໃສ່ພື້ນດິນທີ່ຂາດນ້ຳ, ແລະກະແສນ້ຳໄຫລລົງສູ່ພື້ນດິນແຫ້ງ;
ເຮົາຈະຖອກພຣະວິນຍານຂອງເຮົາລົງເທິງເຊື້ອສາຍຂອງເຈົ້າ, ແລະຖອກເທພຣະພອນຂອງເຮົາລົງເທິງເຊື້ອສາຍຂອງເຈົ້າ.
4ພວກເຂົາຈະປົ່ງຂຶ້ນມາທ່າມກາງຕົ້ນຫຍ້າຄືກັນກັບຕົ້ນໄມ້ທັງຫລາຍທີ່ຢູ່ຕາມແຄມສາຍນ້ຳ.
5ຄົນຫນຶ່ງຈະເວົ້າວ່າ, 'ຂ້ອຍເປັນຂອງພຣະຢາເວ, ແລະອີກຄົນຫນຶ່ງຈະເອີ້ນຊື່ຂອງຢາໂຄບ, ແລະອີກຜູ້ຫນຶ່ງຈະຂຽນໃສ່ມືຂອງລາວວ່າ'
ເປັນຂອງພຣະຢາເວ,' ແລະເອີ້ນຊື່ຂອງເຂົາເອງດ້ວຍນາມຂອງອິດສະຣາເອນ."
6ນີ້ແມ່ນສິ່ງທີ່ພຣະຢາເວກະສັດແຫ່ງອິດສະຣາເອນແລະພຣະຜູ້ໄຖ່ຂອງເຂົາ, ພຣະຢາເວຈອມໂຍທາກ່າວວ່າ: "ເຮົາເປັນເບື້ອງຕົ້ນ, ແລະ
ເຮົາເປັນເບື້ອງປາຍ; ແລະບໍ່ມີພຣະເຈົ້າອື່ນໃດນອກຈາກເຮົາ.
7ແມ່ນໃຜທີ່ເປັນຄືເຮົາ?
ໃຫ້ລາວປະກາດເລື່ອງນີ້ແລະອະທິບາຍໃຫ້ເຮົາຟັງເຫດການທີ່ໄດ້ເກີດຂຶ້ນຕັ້ງແຕ່ເຮົາໄດ້ສະຖາປະນາປະຊາຊົນຄົນບູຮານຂອງເຮົາ,
ແລະໃຫ້ພວກເຂົາບອກເຖິງເຫດການທີ່ຈະມາເຖິງ.
8ຢ່າສູ່ຢ້ານຫລືກົວເລີຍ. ເຮົາໄດ້ປະກາດໃຫ້ທ່ານຮູ້ມາດົນນານແລ້ວ, ແລະໄດ້ປະກາດເລື່ອງນີ້ໃຫ້ຮູ້ກັນແລ້ວບໍ່ແມ່ນບໍ?
ພວກເຈົ້າເປັນພະຍານຂອງເຮົາ: ມີພຣະເຈົ້າອື່ນໃດນອກເຫນືອຈາກເຮົາບໍ? ບໍ່ມີພຣະສີລາອື່ນ; ເຮົາບໍ່ເຄີຍຮູ້ຈັກເລີຍ."
9ທຸກຄົນທີ່ປັ້ນຮູບເຄົາລົບລ້ວນແຕ່ບໍ່ມີຫຍັງເລີຍ; ສິ່ງຕ່າງໆທີ່ພວກເຂົາພໍໃຈເປັນສິ່ງທີ່ບໍ່ມີຄ່າຫຍັງເລີຍ;
ບັນດາພະຍານຂອງພວກເຂົາບໍ່ສາມາດເຫັນຫລືຮູ້ຫຍັງເລີຍ, ແລະພວກເຂົາຈະໄດ້ຮັບຄວາມອັບອາຍ.
10ຜູ້ໃດຈະປັ້ນເທບພະເຈົ້າຫລືຫລໍ່ຮູບເຄົາລົບທີ່ບໍ່ມີຄ່າແດ່?
11ເບິ່ງແມ, ພັກພວກຂອງເຂົາທຸກຄົນຈະໄດ້ຮັບຄວາມອັບອາຍ; ຊ່າງຫັດຖະ ກຳກໍເປັນພຽງມະນຸດເທົ່ານັ້ນ. ຈົ່ງໃຫ້ພວກເຂົາຢືນຢູ່ນຳກັນ;
ພວກເຂົາຈະກົ້ມຂາບລົງດ້ວຍຄວາມຢ້ານແລະຈະໄດ້ຮັບຄວາມອັບອາຍ.
12ຊ່າງຕີເຫລັກເຮັດວຽກດ້ວຍເຄື່ອງມືຂອງລາວ, ສ້າງມັນຂຶ້ນມາ, ເຮັດວຽກຢູ່ເຫນືອຖ່ານກ້ອນຖ່ານ.
ລາວຂຶ້ນຮູບມັນດ້ວຍໄມ້ຄ້ອນແລະເຮັດດ້ວຍແຂນທີ່ແຂງແຮງຂອງເຂົາເມື່ອເຂົາຫິວເຂົ້າ, ກຳລັງຂອງລາວກໍອ່ອນແອລົງ;
ລາວບໍ່ດື່ມນ້ຳເລີຍແລະເລີ່ມຫມົດແຮງ.
13ຊ່າງໄມ້ໄດ້ແທກໄມ້ດ້ວຍເຊືອກແທກ, ແລະເຮັດເຄື່ອງຫມາຍມັນດ້ວຍເຫລັກແຫລມ.
ເຂົາຂຶ້ນຮູບມັນດ້ວຍເຄື່ອງມືຂອງເຂົາແລະຫມາຍມັນດ້ວຍເຂັມທິດ. ເຂົາເຮັດໃຫ້ມັນມີຮູບຮ່າງຕາມແບບຂອງມະນຸດ,
ຄືກັບມະນຸດທີ່ສະຫງ່າງາມ, ເພື່ອໃຫ້ມັນຢູ່ໃນເຮືອນ.
14ເຂົາຕັດຕົ້ນສົນສີດາ, ຫລືເລືອກຕົ້ນສົນສາມໃບຫລືຕົ້ນໂອກ. ເຂົາເລືອກເອົາຕົ້ນໄມ້ໃນປ່າ.
ເຂົາປູກຕົ້ນໄມ້ແປກຕົ້ນຫນຶ່ງແລະຝົນກໍເຮັດໃຫ້ມັນເຕີບໃຫຍ່.
15ແລ້ວຄົນກໍໃຊ້ມັນເພື່ອເປັນໄຟແລະເຮັດໃຫ້ຕົວເອງອົບອຸ່ນ. ແມ່ນແລ້ວ, ເຂົາໄດ້ກໍກອງໄຟແລະປີ້ງເຂົ້າຈີ່.
ຫລັງຈາກນັ້ນເຂົາໄດ້ສ້າງຮູບພະຈາກມັນແລະກາບໄຫວ້; ເຂົາເຮັດຮູບເຄົາລົບຂຶ້ນມາຮູບຫນຶ່ງແລ້ວກາບໄຫວ້ມັນ.
16ເຂົາເຜົາໄມ້ສ່ວນຫນຶ່ງເພື່ອໃຫ້ເປັນໄຟ, ປີ້ງຊີ້ນຂອງເຂົາເທິງໄຟ. ເຂົາກິນແລະພໍໃຈ. ເຂົາເຮັດໃຫ້ຕົວເອງອົບອຸ່ນແລະເວົ້າວ່າ, "ອ້າວ,
ຂ້ອຍອົບອຸ່ນ, ຂ້ອຍໄດ້ເຫັນໄຟແລ້ວ."
17ດ້ວຍໄມ້ສ່ວນທີ່ເຫລືອເຂົາເຮັດເປັນຮູບເທບພະເຈົ້າ, ຮູບແກະສະຫລັກຂອງເຂົາ; ເຂົາກົ້ມຂາບແລະເຄົາລົບມັນ,
ແລະອະທິຖານຕໍ່ມັນໂດຍກ່າວວ່າ, "ຂໍຊົງຊ່ວຍຂ້ານ້ອຍ, ເພາະພະອົງຊົງເປັນພະເຈົ້າຂອງຂ້ານ້ອຍ."
18ພວກເຂົາບໍ່ຮູ້ແລະບໍ່ເຂົ້າໃຈ, ເພາະວ່າດວງຕາຂອງພວກເຂົາມືດບອດແລະເບິ່ງບໍ່ເຫັນ, ແລະໃຈຂອງພວກເຂົາບໍ່ສາມາດຮັບຮູ້ໄດ້.
19ບໍ່ມີໃຜຄິດ, ທັງພວກເຂົາບໍ່ເຂົ້າໃຈແລະເວົ້າວ່າ, "ຂ້ອຍໄດ້ເຜົາໄມ້ສ່ວນຫນຶ່ງໃນກອງໄຟ; ແມ່ນແລ້ວ,
ຂ້ອຍຍັງໄດ້ປີ້ງເຂົ້າຈີ່ໃສ່ຖ່ານຂອງມັນດ້ວຍຂ້ອຍໄດ້ປີ້ງຊີ້ນເທິງຖ່ານຂອງມັນແລະກິນ ບັດນີ້,
ຂ້ອຍຄວນຈະເຮັດໄມ້ສ່ວນຫນຶ່ງເປັນສິ່ງທີ່ຫນ້າກຽດຊັງເພື່ອທີ່ຈະນະມັດສະການບໍ? ຂ້ອຍຄວນກົ້ມຂາບໄມ້ບໍ?"
20ມັນຄ້າຍຄືກັບວ່າເຂົາກຳລັງກິນຂີ້ເຖົ່າ; ຫົວໃຈທີ່ຫລອກລວງຂອງເຂົາໄດ້ນຳເຂົາໃຫ້ຫລົງຜິດ. ເຂົາບໍ່ສາມາດຊ່ວຍຊີວິດຂອງຕົນເອງໄດ້,
ຫລືເຂົາບໍ່ສາມາດເວົ້າໄດ້ວ່າ, "ສິ່ງທີ່ຢູ່ໃນມືຂວາຂອງຂ້ອຍແມ່ນພຣະເຈົ້າປອມ."
21ຈົ່ງຄິດກ່ຽວກັບສິ່ງເຫລົ່ານີ້, ຢາໂຄບ, ແລະອິດສະຣາເອນ, ເພາະວ່າເຈົ້າເປັນຜູ້ຮັບໃຊ້ຂອງເຮົາ: ເຮົາໄດ້ສ້າງເຈົ້າ; ອິດສະຣາເອນເອີຍ
ເຈົ້າເປັນຜູ້ຮັບໃຊ້ຂອງເຮົາເຮົາຈະບໍ່ລືມເຈົ້າ. 22ເຮົາໄດ້ກຳຈັດ, ການກະບົດຂອງເຈົ້າ, ຄືກັບເມກທີ່ຫນາທຶບ, ແລະລົບລ້າງຄວາມບາບ,
ທັງຫລາຍຂອງພວກເຈົ້າເຫມືອນກັບເມກ; ຈົ່ງກັບມາຫາເຮົາ, ເພາະວ່າເຮົາໄດ້ໄຖ່ພວກເຈົ້າແລ້ວ.
23ຟ້າສະຫວັນເອີຍຈົ່ງຮ້ອງເພງ, ເພາະພຣະຢາເວຊົງໄດ້ເຮັດສິ່ງນີ້ແລ້ວ; ທີ່ເລິກຂອງແຜ່ນດິນໂລກຈົ່ງໂຫ່ຮ້ອງ,
ພູເຂົາທັງຫລາຍຈົ່ງເປັ່ງສຽງຮ້ອງເພງ, ປ່າໄມ້ແລະຕົ້ນໄມ້ທຸກຕົ້ນໃນປ່ານັ້ນດ້ວຍ; ເພາະວ່າພຣະຢາເວໄດ້ຊົງໄຖ່ຢາໂຄບແລ້ວ, ແລະ
ຈະສະແດງພຣະສີຣິຂອງພຣະອົງໃນອິດສະຣາເອນ.
24ນີ້ແມ່ນສິ່ງທີ່ພຣະຢາເວ, ພຣະຜູ້ໄຖ່ຂອງເຈົ້າ, ຜູ້ທີ່ຊົງປັ້ນເຈົ້າຕັ້ງແຕ່ຢູ່ໃນທ້ອງກ່າວວ່າ: "ເຮົາແມ່ນພຣະຢາເວ, ຜູ້ດຽວທີ່ໄດ້ສ້າງທຸກສິ່ງ,
ຜູ້ທີ່ຄຶງຟ້າສະຫວັນ, ຜູ້ດຽວທີ່ໄດ້ສ້າງແຜ່ນດິນໂລກ.
25ເຮົາຜູ້ທີ່ເຮັດໃຫ້ຄຳທຳນວາຍຂອງຜູ້ເວົ້າທີ່ໄຮ້ສາລະເປັນຄວາມວ່າງເປົ່າແລະຜູ້ທີ່ເຮັດໃຫ້ພວກຄົນທີ່ອ່ານຄຳທຳນວາຍຕ່າງໆໄດ້ຮັບຄວາມອັບປະຍົດ;
ເຮົາຄືຜູ້ທີ່ໂຄ່ນລົ້ມປັນຍາຂອງຄົນສະຫລາດແລະເຮັດໃຫ້ຄຳປຶກສາຂອງພວກເຂົາບໍ່ມີປະໂຫຍດ.
26ເຮົາຄືພຣະຢາເວ, ຜູ້ທີ່ຮັບຮອງຄຳເວົ້າຂອງຜູ້ຮັບໃຊ້ຂອງພຣະອົງ ແລະ ເຮັດໃຫ້ຄຳທຳນວາຍຂອງຜູ້ສື່ຂ່າວຂອງພຣະອົງເກີດຂຶ້ນຈິງ,
ຜູ້ທີ່ກ່າວເຖິງເມືອງເຢລູຊາເລັມວ່າ, 'ເມືອງນັ້ນຈະມີຄົນອາໄສຢູ່, 'ແລະບັນດາເມືອງຕ່າງໆຂອງຢູດາຍ, 'ພວກເຂົາຈະຖືກສ້າງຂຶ້ນໃຫມ່,

 generated on Tue Jun 17 19:01:42 2025

ແລະເຮົາຈະຍົກສູງຊາກປະຫລັກຫັກພັງຂອງເມືອງເຫລົ່ານັ້ນຂຶ້ນ'[27]ຜູ້ໃດທີ່ເວົ້າກັບທະເລເລິກວ່າ 'ຈົ່ງເຫືອດແຫ້ງໄປ, ແລະ
ເຮົາຈະເຮັດໃຫ້ກະແສນ້ຳຂອງເຈົ້າເຫືອດແຫ້ງໄປ.'
[28]ພຣະຢາເວຄືພຣະອົງຜູ້ທີ່ກ່າວເຖິງໄຊຣັດວ່າ, 'ລາວເປັນຜູ້ລ້ຽງແກະຂອງເຮົາ, ລາວຈະເຮັດຕາມຄວາມປະສົງທຸກຢ່າງຂອງເຮົາ;
ລາວຈະອອກຄຳລັດກ່ຽວກັບເມືອງເຢຣູຊາເລັມວ່າ, 'ເມືອງນັ້ນຈະຖືກສ້າງຂຶ້ນໃຫມ່, ແລະກ່າວເຖິງພຣະວິຫານວ່າ,
'ຈົ່ງວາງຮາກຖານຂອງພຣະວິຫານໄວ້. '"

 generated on Tue Jun 17 19:01:42 2025

45 [1]ນີ້ແມ່ນສິ່ງທີ່ພຣະຢາເວກ່າວກັບໄຊຣັດຜູ້ທີ່ພຣະອົງໄດ້ຊົງເຈີມ, ຜູ້ທີ່ເຮົາຊູມືຂວາຂອງລາວໄວ້,
ເພື່ອທີ່ຈະປາບບັນດາປະຊາຊາດທີ່ຢູ່ຂ້າງຫນ້າລາວ, ເພື່ອປົດອາວຸດກະສັດທັງຫລາຍ, ແລະເປີດປະຕູທັງຫລາຍທີ່ຢູ່ຕໍ່ຫນ້າລາວ,
ເພື່ອທີ່ປະຕູເມືອງເຫລົ່ານັ້ນຍັງຄົງເປີດຢູ່:

[2]"ເຮົາຈະໄປຂ້າງຫນ້າເຈົ້າແລະຈະເຮັດໃຫ້ພູເຂົາທັງຫລາຍຮາບພຽງ; ເຮົາຈະເຮັດໃຫ້ເປັນປະຕູທອງເຫລືອງທັງຫລາຍແຕກເປັນຕ່ອນໆ ແລະ
ຕັດຫ້ອງຂັງເຫລັກ ເປັນທ່ອນໆ,[3]ແລະ ເຮົາຈະມອບຊັບສົມບັດແຫ່ງຄວາມມືດ ແລະ ຄວາມຮັ່ງມີທີ່ເຊື່ອງໄວ້ໃຫ້ເຈົ້າ,
ເພື່ອເຈົ້າຈະຮູ້ວ່າເຮົານີ້ແລະຄື, ພຣະຢາເວ, ຜູ້ທີ່ເອີ້ນເຈົ້າຕາມຊື່ຂອງເຈົ້າ, ເຮົາ, ຄືພຣະເຈົ້າຂອງອິດສະຣາເອນ.
[4]ເພາະເຫັນແກ່ຢາໂຄບເປັນຜູ້ຮັບໃຊ້ຂອງເຮົາແລະອິດສະຣາເອນຜູ້ທີ່ເຮົາເລືອກໄວ້, ເຮົາໄດ້ເອີ້ນເຈົ້າຕາມຊື່ຂອງເຈົ້າ:
ໃຫ້ຕໍາແຫນ່ງແຫງກຽດແກ່ເຈົ້າ, ເຖິງແມ່ນວ່າເຈົ້າບໍ່ຮູ້ຈັກເຮົາ.[5]ເຮົາແມ່ນພຣະຢາເວ, ແລະບໍ່ມີຜູ້ອື່ນອີກ; ບໍ່ມີພຣະເຈົ້າອື່ນໃດນອກຈາກເຮົາ.
ເຮົາຈະຂັດອາວຸດໃຫ້ເຈົ້າເພື່ອສູ້ຮົບ, ເຖິງແມ່ນວ່າເຈົ້າບໍ່ຮູ້ຈັກເຮົາ;
[6]ເພື່ອຄົນທັງຫລາຍຈະຮູ້ຕັ້ງແຕ່ທີ່ດວງຕາເວັນຂຶ້ນແລະຈາກທິດຕາເວັນຕົກວ່າບໍ່ມີພຣະເຈົ້າອື່ນໃດນອກຈາກເຮົາ: ເຮົາແມ່ນພຣະຢາເວ,
ແລະບໍ່ມີຜູ້ໃດອີກ.
[7]ເຮົາປະກອບແສງສະຫວ່າງແລະສ້າງຄວາມມືດ; ເຮົານໍາຄວາມສະຫງົບສຸກມາໃຫ້ແລະສ້າງໄພພິບັດ; ເຮົາແມ່ນພຣະຢາເວ,
ຜູ້ທີ່ເຮັດສິ່ງເຫລົ່ານີ້ທັງຫມົດ.[8]ທ້ອງຟ້າເອີຍ, ຈົ່ງໂຮຍຝົນລົງມາຈາກເບື້ອງເທິງ! ໃຫ້ທ້ອງຟ້າທັງຫລາຍຫລັ່ງຝົນແຫ່ງຄວາມຊອບທໍາລົງມາ.
ຂໍໃຫ້ແຜ່ນດິນໂລກໄດ້ຊຶມຊັບເອົາຄວາມຊອບທໍານັ້ນ, ເພື່ອໃຫ້ຄວາມລອດພົ້ນຈະປົ່ງອອກມາ, ແລະຄວາມຊອບທໍາຈະເກີດຂຶ້ນມາດ້ວຍກັນ.
ເຮົາຄືພຣະຢາເວ, ໄດ້ສ້າງພວກມັນທັງສອງຢ່າງ.
[9]ວິບັດແກ່ຜູ້ໃດທີ່ໂຕ້ຖຽງກັບຜູ້ທີ່ໄດ້ປັ້ນເຂົາ, ແກ່ຜູ້ທີ່ເປັນເຫມືອນຫມໍ້ດິນຫນ່ວຍຫນຶ່ງທ່າມກາງຫມໍ້ດິນທັງຫລາຍໃນແຜ່ນດິນ!
ດິນຫນຽວຈະເວົ້າກັບຊ່າງປັ້ນຫມໍ້ດິນວ່າ, 'ທ່ານກໍາລັງເຮັດຫຍັງ?' ຫລື 'ຜົນງານຂອງທ່ານບໍ່ມີຫູຫິ້ວເຊັ່ນນັ້ນບໍ'?
[10]ວິບັດແກ່ຜູ້ທີ່ເວົ້າກັບບິດາວ່າ, 'ເຈົ້າເປັນພໍ່ແບບໃດ?' ຫລືເວົ້າກັບຜູ້ຍິງວ່າ, 'ເຈົ້າກໍາລັງຈະເກີດລູກແມ່ນຫຍັງ?'
[11]ນີ້ເປັນສິ່ງທີ່ພຣະຢາເວ, ອົງບໍລິສຸດຂອງອິດສະຣາເອນ, ພຣະຜູ້ສ້າງຂອງເຂົາກ່າວວ່າ:
'ເປັນຫຍັງເຈົ້າຖາມຄໍາຖາມກ່ຽວກັບສິ່ງທີ່ເຮົາຈະເຮັດສໍາລັບບຸດທັງຫລາຍຂອງເຮົາ?
ເຈົ້າບອກໃຫ້ເຮົາເຮັດສິ່ງທີ່ກ່ຽວກັບວຽກຂອງມືຂອງເຮົາຊັ້ນບໍ? '
[12]'ເຮົາໄດ້ສ້າງແຜ່ນດິນໂລກແລະສ້າງມະນຸດຢູ່ເທິງໂລກນັ້ນ. ມືຂອງເຮົາເອງນີ້ແຫລະທີ່ໄດ້ຄຶງທ້ອງຟ້າ,
ແລະເຮົາໄດ້ສັ່ງໃຫ້ດວງດາວທຸກດວງປະກົດຂຶ້ນ.
[13]ເຮົາໄດ້ປຸກປັ້ນໄຊຣັດດ້ວຍຄວາມຊອບທໍາ, ແລະ ເຮົາຈະເຮັດໃຫ້ເສັ້ນທາງທັງຫລາຍຂອງລາວສະດວກ. ລາວຈະສ້າງເມືອງຂອງເຮົາ;
ລາວຈະປ່ອຍໃຫ້ປະຊາຊົນຂອງເຮົາທີ່ເປັນຊະເລີຍໄດ້ກັບບ້ານ, ແລະບໍ່ແມ່ນເພື່ອຄ່າຈ້າງຫລືສິນບົນ'".
[14]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, "ລາຍໄດ້ຈາກປະເທດເອຢິບແລະສິນຄ້າຂອງເອທີໂອເປຍກັບຊາວເສບາ, ຜູ້ຊາຍທີ່ຮູບຮ່າງສູງ,
ຈະຖືກນໍາມາຫາເຈົ້າ, ພວກເຂົາຈະເປັນຂອງເຈົ້າ. ພວກເຂົາຈະຕິດຕາມຫລັງເຈົ້າ, ພວກເຂົາຈະເຂົ້າມາພ້ອມໂສ້ທວນ.
ພວກເຂົາຈະກົ້ມກາບເຈົ້າ! ແລະອ້ອນວອນເຈົ້າວ່າ, 'ແນ່ນອນວ່າພຣະເຈົ້າສະຖິດຢູ່ກັບທ່ານ,
ແລະບໍ່ມີຜູ້ໃດອີກນອກຈາກພຣະອົງ."'[15]ແທ້ຈິງພຣະອົງຊົງເປັນພຣະເຈົ້າຜູ້ທີ່ເຊື່ອງຕົວພຣະອົງເອງ, ພຣະເຈົ້າຂອງອິດສະຣາເອນ,
ພຣະຜູ້ຊ່ອຍໃຫ້ລອດ.
[16]ພວກເຂົາທຸກຄົນຈະໄດ້ຮັບຄວາມອັບອາຍແລະກຽດຊັງກັນ; ຜູ້ທີ່ແກະສະຫລັກຮູບເຄົາຣົບຈະເດີນໄປໃນຄວາມອັບອາຍ.
[17]ແຕ່ອິດສະຣາເອນຈະໄດ້ຮັບຄວາມລອດຈາກພຣະຢາເວດ້ວຍຄວາມລອດອັນເປັນນິດ;
ພວກເຈົ້າຈະບໍ່ຕ້ອງໄດ້ຮັບຄວາມລະອາຍຫລືອັບປະຍົດອົດສູອີກເລີຍ.
[18]ນີ້ແມ່ນສິ່ງທີ່ພຣະຢາເວກ່າວ, ຜູ້ທີ່ສ້າງຟ້າສະຫວັນ, ພຣະເຈົ້າອົງທ່ຽງແທ້ທີ່ໄດ້ສ້າງແຜ່ນດິນໂລກແລະສ້າງມັນໄວ້,
ຜູ້ທີ່ໄດ້ຊົງສະຖາປະນາມັນໄວ້. ພຣະອົງບໍ່ໄດ້ຊົງສ້າງມັນໃຫ້ເປັນຄວາມວ່າງເປົ່າ, ແຕ່ຊົງຕັ້ງພຣະໄທໃຫ້ມັນເປັນບ່ອນຢູ່ອາໄສ:“
ເຮົາແມ່ນພຣະຢາເວ, ແລະບໍ່ມີຜູ້ໃດອີກ.
[19]ເຮົາບໍ່ໄດ້ເວົ້າໃນບ່ອນລັບ, ຫລືໃນບ່ອນທີ່ເຊື່ອງໄວ້; ເຮົາບໍ່ໄດ້ເວົ້າກັບເຊື້ອສາຍຂອງຢາໂຄບວ່າ, 'ຈົ່ງສະແຫວງຫາເຮົາໃນຄວາມວ່າງເປົ່າ!'
ເຮົາແມ່ນພຣະຢາເວ, ຜູ້ທີ່ເວົ້າຢ່າງຈິງໃຈ; ເຮົາປະກາດສິ່ງທີ່ຖືກຕ້ອງ.
[20]ຈົ່ງຊຸມນຸມພວກເຈົ້າເອງແລະເຂົ້າມາ! ຈົ່ງເຕົ້າໂຮມກັນ, ຊາວອົບພະຍົບຈາກທ່າມກາງບັນດາປະຊາຊາດ! ພວກເຂົາບໍ່ມີຄວາມຮູ້,
ພວກຄົນທີ່ຖືຮູບແກະສະຫລັກແລະອະທິຖານຕໍ່ເທບພະເຈົ້າທີ່ບໍ່ສາມາດຊ່ວຍໃຫ້ລອດພົ້ນໄດ້.
[21]ຈົ່ງເຂົ້າມາໃກ້ແລະແຈ້ງໃຫ້ເຮົາຮູ້, ຈົ່ງເອົາຫລັກຖານມາ! ໃຫ້ພວກເຂົາສົມຮູ້ຮ່ວມຄິດ. ໃຜໄດ້ສະແດງສິ່ງນີ້ມາຕັ້ງແຕ່ດົນນານມາແລ້ວ?
ຜູ້ໃດທີ່ປະກາດເລື່ອງນີ້? ເຮົາເອງພຣະຢາເວ, ບໍ່ແມ່ນບໍ? ບໍ່ມີພຣະເຈົ້າອື່ນໃດນອກຈາກເຮົາ, ພຣະເຈົ້າຜູ້ທ່ຽງທໍາແລະພຣະຜູ້ຊ່ອຍໃຫ້ລອດ;
ບໍ່ມີໃຜນອກຈາກເຮົາ.
[22]ຈົ່ງກັບມາຫາເຮົາແລະຮັບຄວາມລອດ, ທີ່ສຸດປາຍຂອງແຜ່ນດິນໂລກ; ເພາະວ່າເຮົາແມ່ນພຣະເຈົ້າ, ແລະບໍ່ມີຜູ້ໃດອີກ.
[23]ເຮົາປະຕິຍານດ້ວຍຕົວເຮົາເອງ, ໂດຍກ່າວ ບັນຍັດອັນທ່ຽງທໍາຂອງເຮົາ, ແລະຈະບໍ່ຄືນຄໍາ: 'ທຸກຫົວເຂົ່າຈະຄຸເຂົ່າຕໍ່ເຮົາ,
ທຸກລີ້ນຈະປະຕິຍານຕໍ່ເຮົາ.
[24]ພວກເຂົາຈະເວົ້າເຖິງເຮົາວ່າ, "ໃນພຣະຢາເວພຽງຜູ້ດຽວທີ່ມີຄວາມລອດພົ້ນແລະຄວາມເຂັ້ມແຂງ." ""
ພວກເຂົາທຸກຄົນຜູ້ທີ່ຄຽດແຄ້ນພຣະອົງຈະໄດ້ຮັບຄວາມອັບອາຍ.[25]ໃນພຣະຢາເວ
ເຊື້ອສາຍຂອງອິດສະຣາເອນທັງຫມົດຈະຖືກເຮັດໃຫ້ເປັນຜູ້ຊອບທໍາ; ພວກເຂົາຈະພູມໃຈໃນພຣະອົງ.

46 [1]ພຣະເບັນ ກົ້ມຕໍ່າລົງ, ພຣະເນໂບ ກໍໂນ້ມຕົວລົງ; ບັນດາສັດຕ່າງໆ ແລະ ສັດທີ່ເປັນພາຫະນະໄດ້ແກ່ພວກຮູບເຄົາລົບຂອງພວກເຂົາໄປ.
ຮູບເຄົາລົບເຫລົ່ານີ້ທີ່ພວກເຈົ້າຂົນໄປຖືເປັນພາລະຫນັກສໍາລັບສັດທີ່ອ່ອນເພຍ.[2]ພວກເຂົາໂນ້ມຕົວລົງຕໍ່າ, ແລະຄຸເຂົ່າລົງດ້ວຍກັນ;
ພວກເຂົາບໍ່ສາມາດຊ່ວຍຮູບເຄົາລົບເຫລົ່ານັ້ນໄດ້, ແລະພວກເຂົາເອງກໍໄດ້ຕົກໄປສູ່ການເປັນຊະເລີຍ.

[3]ຈົ່ງຟັງເຮົາ, ເຊື້ອສາຍຂອງຢາໂຄບ, ສ່ວນທີ່ເຫລືອຢູ່ທັງຫມົດຂອງເຊື້ອສາຍອິດສະຣາເອນ, ຜູ້ທີ່ເຮົາໄດ້ອູ້ມມາຕັ້ງແຕ່ກ່ອນທີ່ເຈົ້າເກີດ,
ໄດ້ຖືກປະຕິບັດຕັ້ງແຕ່ຢູ່ໃນທ້ອງ.[4]ເຮົາຄືຜູ້ນັ້ນເຖິງແມ່ນເຈົ້າຈະແກ່ລົງ, ເຮົາກໍຈະອູ້ມເຈົ້າ, ແລະອູ້ມຈົນກວ່າຜົມຂອງເຈົ້າຫງອກ.
ເຮົາໄດ້ສ້າງເຈົ້າແລະເຮົາຈະແບກເຈົ້າ; ເຮົາຈະອູ້ມເຈົ້າແລະເຮົາຈະຊ່ວຍກູ້ເຈົ້າ.
[5]ເຈົ້າຈະປຽບເຮົາກັບໃຜ? ເຈົ້າຄິດວ່າເຮົາຄ້າຍຄືກັບໃຜ, ເພື່ອທີ່ເຮົາຈະເອົາມາປຽບທຽບກັນ?[6]ຄົນທັງຫລາຍເອົາເງິນຄໍາຈາກກະເປົາ ແລະ
ຊັ່ງມັນເທິງຊິງຊັ່ງ. ພວກເຂົາຈ້າງໂລຫະຄົນຫນຶ່ງ, ແລະ ໃຫ້ລາວເຮັດໃຫ້ມັນຂຶ້ນເປັນພະເຈົ້າອົງຫນຶ່ງ; ພວກເຂົາກົ້ມກາບໄຫວ້ມັນ.
[7]ພວກເຂົາຍົກມັນໃສ່ບ່າຂອງພວກເຂົາແລະແບກມັນໄປ; ພວກເຂົາຕັ້ງມັນໄວ້ໃນບ່ອນຂອງມັນ,
ແລະມັນຢືນຢູ່ບ່ອນນັ້ນແລະບໍ່ເຄື່ອນຍ້າຍໄປຈາກທີ່ນັ້ນ. ພວກເຂົາຮ້ອງຫາມັນ,
ແຕ່ມັນບໍ່ສາມາດຕອບຫລືຊ່ວຍຄົນໃດຈາກຄວາມລໍາບາກຂອງເຂົາໄດ້.
[8]ຈົ່ງຄິດກ່ຽວກັບສິ່ງເຫລົ່ານີ້; ຢ່າລະເລີຍສິ່ງເຫລົ່ານີ້, ພວກກະບົດ![9]ຈົ່ງຄິດກ່ຽວກັບສິ່ງທີ່ກ່າວມາກ່ອນຫນ້ານີ້, ໃນສະໄຫມກ່ອນ,
ເພາະວ່າເຮົາແມ່ນພຣະເຈົ້າ, ແລະບໍ່ມີໃຜອີກ, ເຮົາຄືພຣະເຈົ້າ, ແລະບໍ່ມີໃຜຄືກັບເຮົາ.
[10]ເຮົາບອກຈຸດຈົບໃຫ້ຮູ້ໃນຕອນເລີ່ມຕົ້ນ, ແລະບອກກ່ອນລ່ວງຫນ້າສິ່ງທີ່ຍັງບໍ່ທັນເກີດຂຶ້ນ; ເຮົາເວົ້າວ່າ "ແຜນການຂອງເຮົາຈະເກີດຂຶ້ນ,
ແລະເຮົາກໍຈະເຮັດຕາມທີ່ເຮົາປະສົງ."[11]ເຮົາເອີ້ນນົກທີ່ເປັນເຫຍື່ອຈາກທາງທິດຕາເວັນອອກ, ຜູ້ທີ່ເຮົາເລືອກມາຈາກແດນໄກ; ແມ່ນແລ້ວ,
ເຮົາໄດ້ເວົ້າແລ້ວ; ເຮົາກໍຈະກະທໍາໃຫ້ສໍາເລັດ; ເຮົາໄດ້ມີຈຸດປະສົງໄວ້ແລ້ວ, ເຮົາກໍຈະເຮັດເຊັ່ນກັນ.
[12]ພວກເຈົ້າຊົນຊາດທີ່ແຂງກະດ້າງເອີຍ ຈົ່ງຟັງເຮົາ, ຜູ້ທີ່ຢູ່ໄກຈາກການເຮັດສິ່ງທີ່ຊອບທໍາ.[13]ເຮົາກໍາລັງນໍາຄວາມຊອບທໍາຂອງເຮົາມາໃກ້;
ມັນບໍ່ໄດ້ຢູ່ໄກເລີຍ, ແລະຄວາມລອດຂອງເຮົາບໍ່ໄດ້ລໍຖ້າ;
ແລະເຮົາຈະໃຫ້ຄວາມລອດແກ່ຊີໂອນແລະຄວາມສະຫງ່າງາມຂອງເຮົາຕໍ່ອິດສະຣາເອນ.


generated on Tue Jun 17 19:01:42 2025

# 47

1ທິດາພົມມະຈາລີຂອງບາບີໂລນເອີຍ; ຈົ່ງລົງໄປແລະນັ່ງຢູ່ໃນຂີ້ຝຸ່ນດິນ, ລູກສາວຂອງຊາວເຄເດຍເອີຍ. ຈົ່ງນັ່ງເທິງພື້ນດິນໂດຍບໍ່ມີບັນລັງ,
ເຈົ້າຈະບໍ່ຖືກເອີ້ນວ່າງົດງາມແລະອ່ອນໂຍນອີກຕໍ່ໄປ. 2ຈົ່ງເອົາໂມ້ມາແລະໂມ້ແປ້ງສາ; ຈົ່ງຖອດຜ້າຄຸມຫນ້າຂອງເຈົ້າອອກໄປ,
ຈົ່ງຖົກເສື້ອຄຸມຍາວຂອງເຈົ້າຂຶ້ນ, ຢ່າປົກຄຸມຂາຂອງເຈົ້າ, ຈົ່ງລຸຍຂ້າມສາຍນ້ຳທັງຫລາຍໄປ.

3ຄວາມເປືອຍກາຍຂອງເຈົ້າຈະຖືກເປີດເຜີຍ, ແມ່ນແລ້ວ, ເຂົາຈະເຫັນຄວາມຫນ້າອັບອາຍຂອງເຈົ້າ:
ເຮົາຈະແກ້ແຄ້ນແລະຈະບໍ່ໄວ້ຊີວິດແມ່ນແຕ່ຄົນດຽວ. 4ພຣະຜູ້ໄຖ່ຂອງພວກເຮົາ, ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ,
ອົງບໍລິສຸດຂອງອິດສະຣາເອນ. 5ທິດາຂອງຊາວເຄເດຍເອີຍ; ຈົ່ງນັ່ງຢູ່ໃນຄວາມງຽບແລະຈົ່ງເຂົ້າໄປໃນຄວາມມືດ
ເພາະວ່າເຂົາຈະບໍ່ຖືກເອີ້ນວ່າລາຊິນີແຫ່ງອານາຈັກອີກຕໍ່ໄປ.
6ເຮົາໄດ້ໃຈຮ້າຍກັບຊົນຊາດຂອງເຮົາ; ເຮົາໄດ້ທຳລາຍມໍລະດົກຂອງເຮົາເປັນມົນທິນແລະມອບພວກເຂົາໄວ້ໃນມືຂອງເຈົ້າ,
ແຕ່ເຈົ້າບໍ່ໄດ້ສະແດງຄວາມເມດຕາແກ່ພວກເຂົາ; ເຈົ້າໄດ້ເອົາແອກທີ່ຫນັກໃສ່ເທິງຄົນແກ່. 7ເຈົ້າກ່າວວ່າ,
"ຂ້ອຍຈະປົກຄອງຕະຫລອດໄປໃນຖານະກະສັດທີ່ມີອຳນາດສູງສຸດ." ເຈົ້າບໍ່ໄດ້ເອົາໃຈໃສ່ສິ່ງເຫລົ່ານີ້,
ແລະເຈົ້າຍັງບໍ່ໄດ້ພິຈາລະນາເລື່ອງເຫລົ່ານີ້ຈະຈົບລົງຢ່າງໃດ.
8ດັ່ງນັ້ນບັດນີ້, ຈົ່ງຟັງເລື່ອງນີ້ເຈົ້າຜູ້ທີ່ຮັກຄວາມສຸກແລະນັ່ງຢູ່ຢ່າງຫມັ້ນຄົງ; ເຈົ້າຜູ້ທີ່ເວົ້າໃນໃຈຂອງເຈົ້າວ່າ, "ຂ້ອຍມີຢູ່ແລ້ວ,
ແລະບໍ່ມີຜູ້ໃດອີກທີ່ຄ້າຍຄືຂ້ອຍ; ຂ້ອຍຈະບໍ່ນັ່ງເປັນແມ່ຫມ້າຍ, ແລະ
ຂ້ອຍຈະບໍ່ປະສົບກັບການສູນເສຍລູກທັງຫລາຍໄປ." 9ແຕ່ສອງສິ່ງນີ້ຈະມາຫາເຈົ້າໃນເວລາດຽວໃນມື້ດຽວ: ການສູນເສຍລູກ ແລະ
ເປັນແມ່ຫມ້າຍ; ພວກເຂົາຈະມາຫາເຈົ້າດ້ວຍກອງກຳລັງເຕັມຂະຫນາດ,
ເຖິງແມ່ນວ່າເຈົ້າຈະມີເວດມົນຄາຖາແລະເຄື່ອງລາງຂອງຂັງຫລາຍຢ່າງກໍຕາມ.
10ເຈົ້າໄດ້ໄວ້ວາງໃຈໃນຄວາມຊົ່ວຮ້າຍຂອງເຈົ້າ; ເຈົ້າໄດ້ເວົ້າວ່າ, "ບໍ່ມີໃຜເຫັນຂ້ອຍ"; ສະຕິປັນຍາແລະຄວາມຮູ້ຂອງເຈົ້າເຮັດໃຫ້ເຈົ້າຫລົງທາງ,
ແຕ່ເຈົ້າເວົ້າໃນໃຈຂອງເຈົ້າວ່າ, "ຂ້ອຍມີຢູ່, ແລະບໍ່ມີຜູ້ອື່ນອີກຄືກັບຂ້ອຍ." 11ໄພພິບັດຈະມາເຖິງເຈົ້າ;
ເຈົ້າຈະບໍ່ສາມາດຂັບໄລ່ມັນອອກໄປດ້ວຍຄາຖາອາຄົມຂອງເຈົ້າ. ການທຳລາຍລ້າງຈະຕົກລົງມາເທິງເຈົ້າ;
ເຈົ້າຈະບໍ່ສາມາດປັດເປົ່າມັນອອກໄປໄດ້. ໄພພິບັດຈະໂຈມຕີເຈົ້າຢ່າງກະທັນຫັນ, ກ່ອນທີ່ເຈົ້າຈະຮູ້ມັນ.
12ຈົ່ງສືບຕໍ່ຢູ່ໃນການໃຊ້ເວດມົນຂອງເຈົ້າແລະຄາຖາອາຄົມຫລວງຫລາຍຂອງເຈົ້າ ທີ່ເຈົ້າໄດ້ທ່ອງຈຳຢ່າງສັດຊື່ມາແຕ່ຍັງນ້ອຍ;
ບາງທີເຈົ້າຈະປະສົບຜົນສຳເລັດ, ບາງທີເຈົ້າອາດຈະເຮັດໃຫ້ໄພພິບັດຈາກໄປດ້ວຍຄວາມຢ້ານກໍໄດ້.
13ເຈົ້າເບື່ອຫນ່າຍກັບການປຶກສາຫາລືຫລາຍຢ່າງຂອງເຈົ້າ; ຂໍໃຫ້ຄົນເຫລົ່ານັ້ນຢືນຢັດແລະຊ່ວຍພວກເຈົ້າ -
ຄົນເຫລົ່ານັ້ນທີ່ເຮັດແຜນທີ່ຂອງຟ້າສະຫວັນແລະສຶກສາເບິ່ງດວງດາວ, ຄົນເຫລົ່ານັ້ນທີ່ແຈ້ງວັນຂຶ້ນຫນຶ່ງຄ່ຳໃຫ້ຮູ້ -
ໃຫ້ພວກເຂົາຊ່ວຍເຈົ້າໃຫ້ລອດຈາກສິ່ງທີ່ຈະເກີດຂຶ້ນກັບເຈົ້າ.
14ເບິ່ງແມ, ພວກເຂົາຈະເປັນເຫມືອນຕໍເຟືອງ. ໄຟຈະເຜົາໄຫມ້ພວກເຂົາ. ພວກເຂົາຈະຊ່ວຍຕົວເອງໃຫ້ພົ້ນຈາກພະລັງຂອງແປວໄຟບໍ່ໄດ້.
ບໍ່ມີຖ່ານຫີນທີ່ຈະເຮັດໃຫ້ພວກເຂົາອົບອຸ່ນແລະບໍ່ມີໄຟໃຫ້ພວກເຂົານັ່ງຜີງ! 15ພວກຄົນທີ່ເຈົ້າເຄີຍເຮັດວຽກນຳ
ພວກເຂົາຈະກາຍເປັນແບບນີ້ຕໍ່ເຈົ້າ, ແລະເຈົ້າໄດ້ຊື້ແລະຂາຍກັບພວກເຂົາເມື່ອເຈົ້າຍັງຫນຸ່ມ,
ແລະພວກເຂົາທັງຫມົດຍັງເຮັດໃນສິ່ງທີ່ໂງ່ຈ້າຂອງພວກເຂົາ; ແລະເມື່ອເຈົ້າຮ້ອງຫາຄວາມຊ່ວຍເຫລືອ, ບໍ່ມີໃຜສາມາດຊ່ວຍເຈົ້າໄດ້."

 generated on Tue Jun 17 19:01:42 2025

48 [1]ຈົ່ງຟັງເລື່ອງນີ້, ຄົວເຮືອນຂອງຢາໂຄບ, ຜູ້ທີ່ຖືກເອີ້ນໂດຍຊື່ວ່າອິດສະຣາເອນ, ແລະໄດ້ມາຈາກເຊື້ອສາຍຂອງຢູດາ;
ເຈົ້າຜູ້ທີ່ປະຕິຍານຕົນໂດຍພຣະນາມຂອງພຣະຢາເວແລະຮ້ອງຂໍຕໍ່ພຣະເຈົ້າຂອງອິດສະຣາເອນ,
ແຕ່ບໍ່ແມ່ນດ້ວຍຈິງໃຈຫລືດ້ວຍຄວາມປະພຶດຊອບທຳ.
[2]ເພາະວ່າພວກເຂົາເອີ້ນຕົນເອງວ່າເປັນປະຊາກອນຂອງເມືອງບໍລິສຸດແລະວາງໃຈໃນພຣະເຈົ້າຂອງອິດສະຣາເອນ.
ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ.

[3]"ເຮົາໄດ້ປະກາດສິ່ງເຫລົ່ານີ້ໃຫ້ຮູ້ມາຕັ້ງແຕ່ດົນນານມາແລ້ວ; ສິ່ງເຫລົ່ານີ້ໄດ້ອອກມາຈາກປາກຂອງເຮົາ,
ແລະເຮົາໄດ້ເຮັດສິ່ງເຫລົ່ານີ້ເປັນທີ່ຮູ້ກັນ; ເຮົາໄດ້ປະຕິບັດຢ່າງທັນທີທັນໃດ, ແລະກໍເປັນໄປຕາມນັ້ນ.[4]ເພາະວ່າເຮົາຮູ້ວ່າດື້ດ້ານ,
ກ້າມເນື້ອຄໍຂອງເຈົ້າແຂງຄືກັບເຫລັກ, ແລະຫນ້າຜາກຂອງເຈົ້າຄືກັບທອງເຫລືອງ,[5]ເພາະສະນັ້ນ
ເຮົາຈຶ່ງໄດ້ແຈ້ງເລື່ອງເຫລົ່ານີ້ໃຫ້ເຈົ້າຮູ້ລ່ວງຫນ້າ; ເຮົາໄດ້ແຈ້ງໃຫ້ເຈົ້າຮູ້ກ່ອນທີ່ສິ່ງເຫລົ່ານີ້ຈະເກີດຂຶ້ນ, ເພື່ອເຈົ້າຈະບໍ່ສາມາດເວົ້າວ່າ,
'ຮູບເຄົາລົບຂອງຂ້ອຍໄດ້ເຮັດສິ່ງເຫລົ່ານີ້,' ຫລື 'ຮູບແກະສະຫລັກຂອງຂ້ອຍແລະຮູບຫລໍ່ຂອງຂ້ອຍໄດ້ດົນບັນດານສິ່ງເຫລົ່ານີ້.'
[6]ເຈົ້າໄດ້ຍິນກ່ຽວກັບສິ່ງເຫລົ່ານີ້ແລ້ວ; ຈົ່ງເບິ່ງຫລັກຖານທັງຫມົດນີ້; ແລະເຈົ້າ, ເຈົ້າຈະບໍ່ຍອມຮັບສິ່ງທີ່ເຮົາໄດ້ເວົ້າແມ່ນຄວາມຈິງບໍ່?
ຈາກນີ້ຕໍ່ໄປ, ເຮົາກຳລັງສະແດງໃຫ້ເຈົ້າເຫັນສິ່ງໃຫມ່ໆ, ສິ່ງຕ່າງໆທີ່ເຊື່ອງໄວ້ທີ່ເຈົ້າບໍ່ເຄີຍຮູ້.[7]ຕອນນີ້,
ແລະບໍ່ແມ່ນຕັ້ງແຕ່ກ່ອນສິ່ງເຫລົ່ານີ້ໄດ້ເກີດຂຶ້ນ, ພວກເຂົາກາຍມາເປັນຄົນເດີມ, ແລະກ່ອນມື້ນີ້ພວກເຈົ້າບໍ່ໄດ້ຍິນກ່ຽວກັບສິ່ງເຫລົ່ານີ້,
ດັ່ງນັ້ນເຈົ້າຈະບໍ່ສາມາດເວົ້າວ່າ 'ແມ່ນແລ້ວ, ຂ້ອຍຮູ້ກ່ຽວກັບສິ່ງເຫລົ່ານີ້ແລ້ວ.'
[8]ເຈົ້າບໍ່ເຄີຍໄດ້ຍິນ; ເຈົ້າບໍ່ເຄີຍຮູ້; ສິ່ງເຫລົ່ານີ້ບໍ່ໄດ້ຖືກເປີດເຜີຍລ່ວງຫນ້າໃຫ້ເຂົ້າຫູຂອງເຈົ້າມາກ່ອນ.
ເພາະເຮົາໄດ້ຮູ້ວ່າເຈົ້າເຕັມດ້ວຍຄວາມຫລອກລວງຫລາຍຢ່າງ, ແລະຮູ້ວ່າເຈົ້າໄດ້ເປັນຄົນກະບົດຕັ້ງແຕ່ເກີດມາ.
[9]ເພາະເຫັນແກ່ນາມຂອງເຮົາເຮົາຈະອົດກັ້ນຄວາມໂກດແຄ້ນຂອງເຮົາໄວ້, ແລະເພາະເຫັນແກ່ກຽດຕິຍົດຂອງເຮົາ
ເຮົາຈະຢັບຢັ້ງຈາກການທຳລາຍເຈົ້າ.[10]ເບິ່ງແມ, ເຮົາໄດ້ຊຳລະເຈົ້າໃຫ້ບໍລິສຸດແລ້ວ, ແຕ່ບໍ່ເຫມືອນກັບເງິນ;
ເຮົາໄດ້ຊຳລະລ້າງເຈົ້າໃຫ້ສະອາດຢູ່ໃນເຕົາໄຟແຫ່ງຄວາມລຳບາກ.[11]ເພາະເຫັນແກ່ເຮົາເອງ, ເຮົາຈະກະທຳການເພື່ອປະໂຫຍດຂອງເຮົາເອງ;
ເຮົາຈະຍອມເຮັດໃຫ້ນາມຂອງເຮົາເຊື່ອມເສຍໄດ້ແນວໃດ? ເຮົາຈະບໍ່ໃຫ້ກຽດຕິຍົດຂອງເຮົາແກ່ຄົນອື່ນ.
[12]ຈົ່ງຟັງເຮົາ, ຢາໂຄບ, ແລະອິດສະຣາເອນ, ຜູ້ທີ່ເຮົາເອີ້ນວ່າ: ເຮົາຄືຜູ້ນັ້ນ; ເຮົາເປັນເບື້ອງຕົ້ນ, ເຮົາກໍເປັນເບື້ອງປາຍດ້ວຍ.[13]ແມ່ນແລ້ວ,
ມືຂອງເຮົາເອງໄດ້ວາງຮາກຖານຂອງແຜ່ນດິນໂລກ, ແລະມືຂວາຂອງເຮົາໄດ້ກາງທ້ອງຟ້າອອກ; ເມື່ອເຮົາຮ້ອງພວກມັນ,
ພວກມັນກໍຢືນຂຶ້ນພ້ອມກັນ.
[14]ຈົ່ງເຕົ້າໂຮມຕົວພວກເຈົ້າເອງ, ພວກເຈົ້າທຸກຄົນ, ແລະຈົ່ງຟັງ! ໃນບັນດາພວກເຈົ້າຜູ້ໃດປະກາດເລື່ອງເຫລົ່ານີ້?
ຜູ້ຊ່ວຍຂອງພຣະຢາເວຈະເຮັດໃຫ້ຈຸດປະສົງຂອງພຣະອົງທີ່ຕໍ່ສູ້ກັບບາບີໂລນສຳເລັດ.
ເຂົາຈະປະຕິບັດຕາມຄວາມປະສົງຂອງພຣະຢາເວຕໍ່ຊາວເຄເດຍ.[15]ເຮົາເອງ, ເຮົາໄດ້ເວົ້າແລ້ວ, ແມ່ນແລ້ວ, ເຮົາໄດ້ເອີ້ນເຂົາແລ້ວ,
ເຮົາໄດ້ນຳເຂົາມາ, ແລະເຂົາຈະເຮັດໃຫ້ສຳເລັດ.
[16]ຈົ່ງເຂົ້າມາໃກ້ເຮົາ, ຈົ່ງຟັງເລື່ອງນີ້: ຕັ້ງແຕ່ເລີ່ມຕົ້ນເຮົາບໍ່ໄດ້ເວົ້າໃນທີ່ລີ້ລັບ; ເມື່ອມັນເກີດຂຶ້ນ, ເຮົາຢູ່ທີ່ນັ້ນ.
"ບັດນີ້ພຣະຢາເວໄດ້ສົ່ງຂ້ານ້ອຍມາພ້ອມກັບພຣະວິນຍານຂອງພຣະອົງ.
[17]ນີ້ຄືສິ່ງທີ່ພຣະຢາເວພຣະຜູ້ໄຖ່ຂອງເຈົ້າ, ອົງບໍລິສຸດຂອງອິດສະຣາເອນກ່າວວ່າ, "ເຮົາຄືພຣະຢາເວພຣະເຈົ້າຂອງເຈົ້າ,
ຜູ້ທີ່ສອນເຈົ້າໃຫ້ຮູ້ວິທີທີ່ຈະປະສົບຄວາມສຳເລັດ, ຜູ້ທີ່ນຳເຈົ້າໃນທາງທີ່ເຈົ້າຄວນຈະໄປ.[18]ຖ້າເຈົ້າພຽງແຕ່ເຊື່ອຟັງພຣະບັນຍັດຂອງເຮົາ!
ເມື່ອນັ້ນຄວາມສະຫງົບສຸກແລະຄວາມຮັ່ງມີຂອງເຈົ້າຈະໄຫລເຫມືອນກັບແມ່ນ້ຳ, ແລະຄວາມລອດຂອງເຈົ້າເປັນເຫມືອນກັບຄື້ນຂອງທະເລ.
[19]ເຊື້ອສາຍຂອງເຈົ້າກໍຈະຫລວງຫລາຍດັ່ງເມັດຊາຍ, ແລະລູກຫລານໃນທ້ອງຂອງເຈົ້າຈະຫລວງຫລາຍເທົ່າກັບເມັດຊາຍ;
ຊື່ຂອງພວກເຂົາຈະບໍ່ຖືກຕັດອອກແລະຈະບໍ່ຖືກລົບລ້າງອອກໄປຈາກຕໍ່ຫນ້າຂອງເຮົາ.
[20]ຈົ່ງອອກມາຈາກບາບີໂລນ! ຈົ່ງຫນີຈາກຊາວເຄເດຍ! ດ້ວຍມີສຽງລະຄັງຮ້ອງປະກາດເລື່ອງນີ້! ຈົ່ງເຮັດໃຫ້ເລື່ອງນີ້ເປັນທີ່ຮູ້ຈັກ,
ຈົ່ງເຮັດໃຫ້ເລື່ອງນີ້ອອກໄປຍັງທີ່ສຸດປາຍຂອງແຜ່ນດິນໂລກ! ຈົ່ງເວົ້າວ່າ, 'ພຣະຢາເວໄດ້ຊົງໄຖ່ຢາໂຄບຜູ້ຮັບໃຊ້ຂອງພຣະອົງແລ້ວ.'
[21]ພວກເຂົາບໍ່ໄດ້ຫິວນ້ຳເມື່ອພຣະອົງຊົງນຳຫນ້າພວກເຂົາຜ່ານທະເລຊາຍ; ພຣະອົງໄດ້ເຮັດໃຫ້ນ້ຳໄຫລອອກຈາກສີລາໃຫ້ແກ່ພວກເຂົາ;
ພຣະອົງຊົງແຍກສີລາໃຫ້ເປີດອອກ, ແລະນ້ຳກໍໄຫລອອກມາ.[22]ບໍ່ມີຄວາມສະຫງົບສຸກ ສຳລັບຄົນອະທຳເລີຍ- ພຣະຢາເວກ່າວດັ່ງນີ້

 generated on Tue Jun 17 19:01:42 2025

49 [1]ຈົ່ງຟັງເຮົາ, ແຜ່ນດິນແຄມທະເລເອີຍ! ບັດນີ້ປະຊາຊົນທັງຫລາຍທີ່ຢູ່ຫ່າງໄກຈົ່ງຕັ້ງໃຈຟັງຂ້ອຍ. ພຣະຢາເວໄດ້ຊົງເອີ້ນຊື່ຂ້ອຍ,
ຕັ້ງແຕ່ແມ່ຂອງຂ້ອຍໄດ້ນຳຂ້ອຍເຂົ້າມາສູ່ໂລກນີ້.[2]ພຣະອົງໄດ້ຊົງເຮັດໃຫ້ປາກຂອງຂ້ອຍເປັນຄືດາບແຫລມ;
ພຣະອົງເຊື່ອງຂ້ອຍໄວ້ໃນຮົ່ມເງົາພຣະຫັດຂອງພຣະອົງ; ພຣະອົງໄດ້ເຮັດໃຫ້ຂ້ອຍເປັນລູກສອນຂັດມັນ;
ພຣະອົງໄດ້ເຊື່ອງຂ້ອຍໄວ້ໃນແລ່ງທະນູຂອງພຣະອົງ.

[3]ພຣະອົງໄດ້ກ່າວກັບຂ້ອຍວ່າ, "ເຈົ້າແມ່ນຜູ້ຮັບໃຊ້ຂອງເຮົາ,
ອິດສະຣາເອນຜູ້ເຊິ່ງເຮົາສຳແດງພຣະສີລິຂອງເຮົາຜ່ານທາງເຈົ້າ."[4]ແຕ່ຂ້ອຍໄດ້ຕອບວ່າ,
"ເຖິງແມ່ນວ່າຂ້ານ້ອຍຄິດວ່າຂ້ານ້ອຍໄດ້ອອກແຮງງານຢ່າງບໍ່ມີປະໂຫຍດ, ຂ້ານ້ອຍໄດ້ໃຊ້ກຳລັງຂອງຂ້ານ້ອຍໃຫ້ກັບຄວາມຫວ່າງເປົ່າ,
ແຕ່ຄວາມຍຸດຕິທຳຂອງຂ້ານ້ອຍແມ່ນຢູ່ກັບພຣະຢາເວ, ແລະລາງວັນຂອງຂ້ານ້ອຍຢູ່ກັບພຣະເຈົ້າຂອງຂ້ານ້ອຍ."
[5]ບັດນີ້ພຣະຢາເວໄດ້ກ່າວວ່າ - ພຣະອົງຜູ້ຊົງປັ້ນຂ້ານ້ອຍຕັ້ງແຕ່ເກີດໃຫ້ເປັນຜູ້ຮັບໃຊ້ຂອງພຣະອົງ,
ເພື່ອຟື້ນຟູຢາໂຄບກັບຄືນມາຫາພຣະອົງອີກຄັ້ງ, ເພື່ອທີ່ຈະຮວບຮວມອິດສະຣາເອນມາຫາພຣະອົງ,
ເພາະຂ້ານ້ອຍໄດ້ຮັບກຽດກຽດໃນສາຍພຣະເນດຂອງພຣະຢາເວ, ແລະພຣະເຈົ້າຂອງຂ້ານ້ອຍໄດ້ຊົງເປັນກຳລັງຂອງຂ້ານ້ອຍ.
[6]ແລະພຣະອົງເວົ້າວ່າ, "ການເປັນຜູ້ຮັບໃຊ້ຂອງເຮົາ ທີ່ຈະສະຖາປານບັນດາເຜົ່າຂອງຢາໂຄບ,
ແລະຟື້ນຟູບັນດາຜູ້ທີ່ລອດຊີວິດຂອງອິດສະຣາເອນ. ເປັນສິ່ງເລັກນ້ອຍເກີນໄປສຳລັບເຈົ້າ,.
ເຮົາຈະເຮັດໃຫ້ເຈົ້າເປັນແສງສະຫວ່າງແກ່ຄົນຕ່າງຊາດ, ເພື່ອທີ່ເຈົ້າຈະເປັນຄວາມລອດຂອງເຮົາໄປຍັງສຸດປາຍຂອງແຜ່ນດິນໂລກ."
[7]ນີ້ແມ່ນສິ່ງທີ່ພຣະຢາເວກ່າວ, ພຣະຜູ້ໄຖ່ຂອງອິດສະຣາເອນ, ອົງບໍລິສຸດຂອງພວກເຂົາ, ບອກດັ່ງນີ້,
ຕໍ່ຜູ້ທີ່ຊີວິດຂອງເຂົາຖືກດູຫມິ່ນແລະກຽດຊັງ, ຈາກຊົນຊາດທັງຫລາຍ, ແລະຂ້າໃຊ້ຂອງບັນດາຜູ້ປົກຄອງ,
"ກະສັດທັງຫລາຍຈະເຫັນເຈົ້າແລະລຸກຂຶ້ນ, ພວກເຈົ້ານາຍຈະເຫັນເຈົ້າແລະກົ້ມຂາບລົງ, ເພາະວ່າພຣະຢາເວຜູ້ຊົງສັດຊື່,
ອີກທັງຊົງເປັນອົງບໍລິສຸດຂອງອິດສະຣາເອນ, ຜູ້ທີ່ໄດ້ເລືອກເຈົ້າໄວ້."
[8]ນີ້ແມ່ນສິ່ງທີ່ພຣະຢາເວກ່າວວ່າ, "ໃນເວລານັ້ນເຮົາຕັ້ງໃຈສະແດງຄວາມພໍໃຈຂອງເຮົາ ເຮົາຈະຕອບເຈົ້າ,
ແລະໃນວັນແຫ່ງຄວາມລອດເຮົາຈະຊ່ວຍເຈົ້າ; ເຮົາຈະປົກປ້ອງເຈົ້າ, ແລະໃຫ້ເຈົ້າເປັນພັນທະສັນຍາສຳລັບປະຊາຊົນ,
ເພື່ອສ້າງສາແຜ່ນດິນນັ້ນຂຶ້ນໃຫມ່, ເພື່ອມອບທີ່ຮ້າງເປົ່າເປັນມໍລະດົກ.
[9]ເຈົ້າຈະເວົ້າກັບນັກໂທດວ່າ, 'ຈົ່ງອອກມາ;' ແລະເວົ້າຕໍ່ຜູ້ຄົນທີ່ຢູ່ໃນຄຸກມືດວ່າ, 'ຈົ່ງສະແດງຕົວຂອງພວກເຈົ້າເອງ.'
ພວກເຂົາຈະລ້ຽງສັດຕາມແຄມຖະ ຫນົນ, ແລະຢູ່ທຸກບ່ອນທີ່ເປັນຮົ່ມແມ່ນບ່ອນລ້ຽງສັດຂອງພວກເຂົາ.
[10]ພວກເຂົາຈະບໍ່ຫິວໂຫຍຫລືກະຫາຍ; ອີກທັງຄວາມຮ້ອນຫລືແສງຕາເວັນຈະບໍ່ໂຈມຕີພວກເຂົາ,
ເພາະວ່າພຣະອົງຜູ້ທີ່ມີຄວາມເມດຕາສົງສານຕໍ່ພວກເຂົາຈະນຳພວກເຂົາໄປ; ພຣະອົງຈະນຳພາພວກເຂົາໄປສູ່ຫ້ວຍນ້ຳ.
[11]ແລ້ວເຮົາຈະເຮັດໃຫ້ພູເຂົາທັງຫລາຍກາຍເປັນຖະຫນົນ, ແລະເຮັດໃຫ້ລະດັບເສັ້ນທາງຫລວງຮາບລຽບ."
[12]ເບິ່ງແມ, ຄົນເຫລົ່ານີ້ຈະມາຈາກແດນໄກ, ບາງຄົນມາຈາກທິດເຫນືອ ແລະ ທິດຕາເວັນຕົກ; ແລະບາງຄົນຈະມາຈາກແຜ່ນດິນຊີນີມ.
[13]ຟ້າສະຫວັນເອີຍ, ຈົ່ງຮ້ອງເພງ, ແລະແຜ່ນດິນໂລກເອີຍຈົ່ງຊື່ນຊົມຍິນດີພູເຂົາທັງຫລາຍເອີຍຈົ່ງເປັ່ງສຽງຮ້ອງເພງ
ເພາະພຣະຢາເວປອບໂຍນຊົນຊາດຂອງພຣະອົງ, ແລະ ຈະມີຄວາມເມດຕາສົງສານຕໍ່ຄວາມທຸກລຳບາກຂອງເຂົາ.
[14]ແຕ່ຊີໂອນກ່າວວ່າ, "ພຣະຢາເວໄດ້ປະຖິ້ມຂ້ອຍແລ້ວ, ແລະອົງພຣະຜູ້ເປັນເຈົ້າໄດ້ຊົງລືມຂ້ອຍແລ້ວ."[15]"ແມ່ຍິງຈະລືມລູກອ່ອນ,
ຂອງນາງທີ່ຍັງກິນນົມຢູ່ໃນເອິກຂອງນາງໄດ້ບໍ, ດັ່ງນັ້ນນາງຈະບໍ່ມີຄວາມເມດຕາສົງສານລູກຊາຍທີ່ລາວເກີດມາບໍ? ແມ່ນແລ້ວ,
ພວກເຂົາອາດຈະລືມໄດ້, ແຕ່ເຮົາຈະບໍ່ລືມເຈົ້າ.
[16]ເບິ່ງແມ, ເຮົາໄດ້ຈາລຶກຊື່ຂອງເຈົ້າໄວ້ໃນຝາມືຂອງເຮົາ; ກຳແພງເມືອງຂອງເຈົ້າຢູ່ຕໍ່ຫນ້າເຮົາຕະຫລອດໄປ.
[17]ບຸດທັງຫລາຍຂອງເຈົ້າກຳລັງຮີບຮ້ອນກັບມາ, ໃນຂະນະທີ່ພວກທີ່ທຳລາຍພວກເຈົ້າຈະຫນີໄປ.[18]ຈົ່ງຫລຽວເບິ່ງອ້ອມໆ ແລະ ເບິ່ງ,
ພວກເຂົາກຳລັງເຕົ້າໂຮມກັນແລະມາຫາພວກເຈົ້າ.
ນີ້ແມ່ນຄຳປະກາດຂອງພຣະຢາເວເຮົາມີຊີວິດຢູ່ແນ່ສັນໃດເຈົ້າຈະນຸ່ງເຄື່ອງຂອງພວກເຂົາຄືກັນກັບເຄື່ອງປະດັບສັນນັ້ນ, ແລະ
ເຈົ້າຈະດຶງພວກເຂົາມາເຫມືອນກັບເຈົ້າສາວຂອງເຈົ້າ.
[19]ເຖິງແມ່ນວ່າເຈົ້າຈະເປັນບ່ອນທີ່ຮ້າງເປົ່າແລະຮົກຮ້າງ, ເປັນດິນແດນທີ່ຊາກປະຫລັກຫັກພັງ, ບັດນີ້ເຈົ້າຈະນ້ອຍເກີນໄປສຳລັບຜູ້ທີ່ຢູ່ອາໄສຢູ່,
ແລະຜູ້ຄົນທີ່ລ້າງຜານເຈົ້າຈະຢູ່ຫ່າງໄກ.[20]ບຸດທັງຫລາຍທີ່ເກີດໃນຊ່ວງເວລາທີ່ພວກເຈົ້າທຸກໃຈທີ່ສູນສຽຍບຸດຂອງເຈົ້າຈະເວົ້າໃຫ້ເຈົ້າໄດ້ຍິນວ່າ
'ສະຖານທີ່ນີ້ຄັບແຄບເກີນໄປສຳລັບພວກເຮົາ, ຈົ່ງສ້າງທີ່ຢູ່ສຳລັບພວກເຮົາ, ເພື່ອທີ່ພວກເຮົາຈະໄດ້ອາໄສຢູ່ທີ່ນີ້.'
[21]ແລ້ວເຈົ້າຈະຖາມຕົວເອງວ່າ, 'ແມ່ນໃຜໄດ້ເກີດບຸດເຫລົ່ານີ້ໃຫ້ແກ່ຂ້ອຍ? ຂ້ອຍໄດ້ທຸກໃຈເພາະສູນເສຍບຸດແລະເປັນຫມັນ,
ຖືກເນລະເທດເປັນຊະເລີຍແລະພັດພາກກັນ. ໃຜໄດ້ລ້ຽງດູເດັກນ້ອຍເຫລົ່ານີ້? ເບິ່ງແມ, ຂ້ອຍຖືກປະຖິ້ມໄວ້ຢູ່ຄົນດຽວ; ຄົນເຫລົ່ານີ້ມາແຕ່ໃສ?
'"

[22]ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ,“ ເບິ່ງແມ, ເຮົາຈະຊູມືຂອງເຮົາຂຶ້ນຕໍ່ບັນດາປະຊາຊາດ;
ເຮົາຈະຍົກທຸງສັນຍານຕໍ່ຊົນຊາດທັງຫລາຍ.
ພວກເຂົາຈະນຳເອົາລູກຊາຍຂອງພວກເຈົ້າເຂົ້າໄປໃນອ້ອມກອດຂອງພວກເຂົາແລະແບກລູກສາວຂອງພວກເຈົ້າມາເທິງບ່າຂອງພວກເຂົາ.
[23]ກະສັດທັງຫລາຍຈະເປັນພໍ່ອຸປະຖຳຂອງເຈົ້າ, ແລະຣາຊີນີທັງຫລາຍຈະເປັນແມ່ລ້ຽງຂອງເຈົ້າ;
ພວກເຂົາຈະກົ້ມຂາບເຈົ້າຈົນໃບຫນ້າພວກເຂົາຕິດກັບພື້ນດິນແລະເລຍຂີ້ຝຸ່ນຢູ່ຕີນຂອງເຈົ້າ; ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ;
ບັນດາຜູ້ທີ່ລໍຖ້າເຮົາຈະບໍ່ໄດ້ຮັບຄວາມອັບອາຍ."
[24]ຈະເອົາຂອງທີ່ຖືກຍຶດມາໄດ້ຈາກພວກນັກຮົບບໍ, ຫລືພວກທີ່ຖືກຈັບໄປເປັນຊະເລີຍຈາກຄວາມໂຫດຮ້າຍໄດ້ບໍ?[25]ແຕ່ພຣະຢາເວກ່າວດັ່ງນີ້,“
ແມ່ນແລ້ວ, ພວກທີ່ຖືກຈັບໄປຈະຖືກເອົາໄປຈາກນັກຮົບ, ແລະຂອງທີ່ຍຶດມາຈະໄດ້ຮັບການຊ່ວຍກູ້
ເພາະເຮົາຈະຕໍ່ສູ້ກັບສັດຕູຂອງເຈົ້າແລະຊ່ວຍບຸດທັງຫລາຍຂອງເຈົ້າໃຫ້ລອດ.

 generated on Tue Jun 17 19:01:42 2025

26ເຮົາຈະລ້ຽງຜູ້ຄົນທີ່ກົດຂີ່ເຈົ້າດ້ວຍເນື້ອຫນັງຂອງພວກເຂົາເອງ;
ແລະພວກເຂົາຈະມຶນເມົາດ້ວຍເລືອດຂອງພວກເຂົາເຫມືອນກັບວ່າເປັນເຫລົ້າອະງຸ່ນ. ເມື່ອນັ້ນມະນຸດຊາດທັງປວງຈະຮູ້ວ່າເຮົາແມ່ນພຣະຢາເວ,
ເປັນພຣະຜູ້ຊ່ວຍໃຫ້ລອດຂອງເຈົ້າແລະເປັນພຣະຜູ້ໄຖ່ຂອງເຈົ້າ, ແລະອົງຣິດທານຸພາບຂອງຢາໂຄບ."


generated on Tue Jun 17 19:01:42 2025

50 [1]ພຣະຢາເວ ກ່າວດັ່ງນີ້ວ່າ, "ຫນັງສືປະຮ້າງທີ່ເຮົາໄດ້ປະຮ້າງກັບແມ່ຂອງເຈົ້າຢູ່ໃສ? ເຮົາໄດ້ຂາຍເຈົ້າໃຫ້ກັບພວກເຈົ້າຫນີ້ຄົນໃດ? ເບິ່ງແມ,
ເຈົ້າຖືກຂາຍຍ້ອນຄວາມບາບທັງຫລາຍຂອງເຈົ້າ, ແລະຍ້ອນການກະບົດຂອງເຈົ້າ, ແມ່ຂອງເຈົ້າຈຶ່ງໄດ້ຖືກໄລ່ໄປ.

[2]ເປັນຫຍັງເຮົາໄດ້ມາແລ້ວແຕ່ບໍ່ມີໃຜຢູ່ທີ່ນັ້ນເລີຍ? ເປັນຫຍັງເຮົາໄດ້ເອີ້ນແລ້ວແຕ່ບໍ່ມີໃຜຕອບ? ມືຂອງເຮົາສັ້ນເກີນໄປທີ່ຈະໄຖ່ເຈົ້າໄດ້ບໍ?
ເຮົາບໍ່ມີຣິດອຳນາດຫຍັງທີ່ຈະຊ່ອຍກູ້ເຈົ້າໄດ້ບໍ? ເບິ່ງແມ, ເມື່ອເຮົາກ່າວນາບຂູ່ ເຮົາເຮັດໃຫ້ທະເລເຫືອດແຫ້ງໄປ;
ເຮົາໄດ້ເຮັດໃຫ້ແມ່ນ້ຳກາຍເປັນທະເລຊາຍ; ປາໃນແມ່ນ້ຳເຫລົ່ານັ້ນຕາຍຍ້ອນຂາດນ້ຳ ແລະ ເນົ່າເປື່ອຍ.[3]ເຮົາຫົ່ມທ້ອງຟ້າດ້ວຍຄວາມມືດ;
ເຮົາຫຸ້ມມັນດ້ວຍຜ້າກະສອບ."
[4]ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ປະທານລີ້ນໃຫ້ແກ່ຂ້ານ້ອຍເຫມືອນກັບຄົນຫນຶ່ງໃນບັນດາຜູ້ທີ່ໄດ້ຮັບການສັ່ງສອນ,
ເພື່ອໃຫ້ຂ້ານ້ອຍເວົ້າຖ້ອຍຄຳທີ່ຊູໃຈຕໍ່ຄົນທີ່ອ່ອນແຮງ; ພຣະອົງຊຸກປຸກຂ້ານ້ອຍຢູ່ທຸກໆຕອນເຊົ້າ;
ພຣະອົງຊຸກປຸກຫູຂອງຂ້ານ້ອຍໃຫ້ໄດ້ຍິນເຫມືອນກັບຄົນຜູ້ທີ່ໄດ້ຮັບການສັ່ງສອນ.
[5]ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ເປີດຫູຂອງຂ້ອຍ, ແລະຂ້ອຍບໍ່ໄດ້ເປັນພວກຄົນທໍລະຍົດ, ອີກທັງຂ້ານ້ອຍບໍ່ໄດ້ຫັນຫນີຈາກພຣະອົງ.
[6]ຂ້ານ້ອຍໄດ້ຫັນຫລັງຂອງຂ້ານ້ອຍໃຫ້ກັບພວກຄົນທີ່ທຸບຕີຂ້ານ້ອຍ, ແລະປີ້ນແກ້ມໃຫ້ຜູ້ທີ່ດຶງຫນວດຂອງຂ້ານ້ອຍອອກ;
ຂ້ານ້ອຍບໍ່ໄດ້ເຊື່ອງຫນ້າຈາກການກະທຳທີ່ຫນ້າອັບອາຍແລະການຖົ່ມນ້ຳລາຍ.
[7]ເພາະວ່າພຣະຢາເວອົງພຣະຜູ້ເປັນເຈົ້າຈະຊົງຊ່ວຍຂ້ານ້ອຍໄດ້; ເພາະສະນັ້ນຂ້ານ້ອຍບໍ່ໄດ້ຮັບຄວາມອັບອາຍ;
ດັ່ງນັ້ນພຣະອົງໄດ້ຊົງເຮັດໃຫ້ຫນ້າຂອງຂ້ານ້ອຍເຫມືອນກັບຫີນເຫລັກໄຟ, ເພາະວ່າຂ້ານ້ອຍຮູ້ວ່າຂ້ານ້ອຍຈະບໍ່ໄດ້ຮັບຄວາມອັບອາຍ.
[8]ພຣະອົງຜູ້ທີ່ຈະຊົງເຮັດໃຫ້ຂ້ານ້ອຍເປັນຜູ້ຊອບທຳຊົງຢູ່ໃກ້. ຜູ້ໃດຈະຕໍ່ຕ້ານກັບຂ້ານ້ອຍ? ໃຫ້ເຮົາຢືນຂຶ້ນແລະປະເຊີນຫນ້າກັນ.
ໃຜເປັນຜູ້ກ່າວຫາຂ້ານ້ອຍ? ໃຫ້ລາວເຂົ້າມາໃກ້ຂ້ານ້ອຍ.[9]ຈົ່ງເບິ່ງ, ພຣະຢາເວອົງພຣະຜູ້ເປັນເຈົ້າຈະຊ່ວຍຂ້ານ້ອຍ.
ຜູ້ໃດຈະປະກາດວ່າຂ້ານ້ອຍມີຄວາມຜິດ? ເບິ່ງແມ, ພວກເຂົາທຸກຄົນຈະຫມົດໄປຄືກັນກັບເສື້ອຜ້າ; ແມງໄມ້ຈະກັດກິນພວກເຂົາເສຍ.
[10]ໃຜແດ່ໃນພວກເຈົ້າທີ່ຢ້ານກົວພຣະຢາເວ? ມີໃຜຟັງສຽງຂອງຜູ້ຮັບໃຊ້ຂອງພຣະອົງ? ໃຜທີ່ຍ່າງໃນຄວາມມືດທຶບທີ່ບໍ່ມີແສງສະຫວ່າງ?
ເຂົາຄວນໄວ້ວາງໃຈໃນນາມຂອງພຣະຢາເວ ແລະເພິ່ງພາພຣະເຈົ້າຂອງເຂົາ.
[11]ຈົ່ງເບິ່ງ, ພວກເຈົ້າທຸກຄົນທີ່ຈູດໄຟ, ຜູ້ທີ່ຄາດຕົນເອງດ້ວຍຄົບໄຟ:
ຈົ່ງຍ່າງດ້ວຍແສງສະຫວ່າງຂອງໄຟຂອງພວກເຈົ້າແລະໃນແປວໄຟທີ່ເຈົ້າໄດ້ກໍ່ຂຶ້ນ. ນີ້ແມ່ນສິ່ງທີ່ພວກເຈົ້າໄດ້ຮັບຈາກເຮົາ:
ຄືເຈົ້າຈະນອນລົງໃນບ່ອນແຫ່ງຄວາມເຈັບປວດ.

51 [1]ຈົ່ງຟັງເຮົາ, ພວກເຈົ້າຜູ້ທີ່ດຳເນີນຕາມຄວາມຊອບທຳ, ພວກເຈົ້າຜູ້ທີ່ສະແຫວງຫາພຣະຢາເວ:
ຈົ່ງເບິ່ງກ້ອນຫີນທີ່ພວກເຈົ້າໄດ້ສະກັດມາແລະເບິ່ງບໍ່ຫີນຈາກບ່ອນທີ່ພວກໄດ້ຂຸດນັ້ນ.

[2]ຈົ່ງເບິ່ງອັບຣາຮາມບັນພະບູລຸດຂອງພວກເຈົ້າ, ແລະ ຊາຣາຜູ້ທີ່ຄອດພວກເຈົ້າອອກມາ; ເພາະວ່າຕອນທີ່ລາວຢູ່ຄົນດຽວ, ເຮົາໄດ້ເອີ້ນລາວ.
ເຮົາໄດ້ອວຍພອນລາວ ແລະ ເຮັດໃຫ້ລາວມີຄົນຈຳນວນຫລວງຫລາຍ.
[3]ແມ່ນແລ້ວ, ພຣະຢາເວຈະຊົງເລົ້າໂລມຊີໂອນ; ພຣະອົງຈະຊົງເລົ້າໂລມບັນດາທີ່ຮ້າງເປົ່າທຸກແຫ່ງຂອງລາວ;
ພຣະອົງຈະຊົງເຮັດໃຫ້ຖິ່ນແຫ້ງແລ້ງກັນດານຂອງລາວກາຍເປັນສວນເອເດນ,
ແລະເຂດທົ່ງພຽງທະເລຊາຍຂ້າງຮ່ອມພູແມ່ນ້ຳຈໍແດນໃຫ້ເປັນເຫມືອນອຸທະຍານຂອງພຣະຢາເວ;
ເຊິ່ງຈະພົບຄວາມສຸກແລະຄວາມຍິນດີໃນນາງ, ອີກທັງການຂອບພຣະຄຸນແລະສຽງຂອງການຮ້ອງເພງ.
[4]ຊົນຊາດຂອງເຮົາເອີຍ, ຈົ່ງຕັ້ງໃຈຟັງເຮົາ; ແລະປະຊາຊົນຂອງເຮົາເອີຍຈົ່ງຟັງເຮົາ, ເພາະເຮົາຈະອອກກົດບັນຍັດ,
ແລະເຮົາຈະເຮັດໃຫ້ຄວາມຍຸດຕິທຳຂອງເຮົາເປັນຄວາມສະຫວ່າງໃຫ້ແກ່ປະຊາຊາດທັງຫລາຍ.[5]ຄວາມຊອບທຳຂອງເຮົາຢູ່ໃກ້ແລ້ວ;
ຄວາມພົ້ນຂອງເຮົາຈະອອກໄປ, ແລະແຂນຂອງເຮົາຈະພິພາກສາບັນດາປະຊາຊາດ, ແຜ່ນດິນແຄມທະເລຈະລໍຄອຍເຮົາ,
ພວກເຂົາຈະລໍຄອຍຢ່າງຮ້ອນຮົນເພາະແຂນຂອງເຮົາ.
[6]ຈົ່ງເງີຍຫນ້າຂອງເຈົ້າຂຶ້ນສູ່ທ້ອງຟ້າແລະແນມເບິ່ງແຜ່ນດິນໂລກທາງລຸ່ມ, ເພາະທ້ອງຟ້າຈະຫາຍໄປເຫມືອນກັບຄວັນ,
ແຜ່ນດິນໂລກຈະເຊື່ອມໂຊມລົງເຫມືອນກັບເສື້ອຜ້າ, ແລະຜູ້ທີ່ອາໄສຢູ່ຈະຕາຍໄປເຫມືອນກັບແມງວັນ.
ແຕ່ຄວາມລອດຂອງເຮົາຈະດຳລົງຢູ່ຕະຫລອດໄປເປັນນິດ, ແລະຄວາມຊອບທຳຂອງເຮົາຈະບໍ່ຢຸດເຮັດວຽກເລີຍ.
[7]ຈົ່ງຟັງເຮົາ, ພວກເຈົ້າຜູ້ທີ່ຮູ້ວ່າແມ່ນຫຍັງຄືຄວາມຊອບທຳ, ພວກເຈົ້າຜູ້ທີ່ມີກົດບັນຍັດຂອງເຮົາຢູ່ໃນໃຈ: ຢ່າຢ້ານກົວຄຳເຢາະເຢີ້ຍຂອງມະນຸດ,
ແລະຢ່າທໍ້ໃຈຈາກການປຽບຫຍາມຂອງພວກເຂົາ.[8]ເພາະໂຕແມງໄມ້ຈະກິນພວກເຂົາເຫມືອນກິນເສື້ອຜ້າ,
ແລະໂຕຫນອນຈະກິນພວກເຂົາຄືກິນຂົນແກະ; ແຕ່ຄວາມຊອບ ທຳຂອງເຮົາຈະຄົງຢູ່ຕະຫລອດໄປ,
ແລະຄວາມລອດຂອງເຮົາຈະໄປສູ່ທຸກຊົ່ວເຊື້ອຊາດ."
[9]ຈົ່ງຕື່ນ, ຕື່ນຂຶ້ນເຖີດ, ຈົ່ງສວມໂຕເອງດ້ວຍກຳລັງ, ດ້ວຍແຂນຂອງພຣະຢາເວ. ຈົ່ງຕື່ນຂຶ້ນເຫມືອນໃນສະໄຫມກ່ອນ,
ຢ່າງເຊື້ອຊາດທັງຫລາຍໃນສະໄຫມໂບຮານ. ພຣະອົງເປັນຜູ້ທີ່ໄດ້ທຳລາຍຣາຮາບບໍ່ແມ່ນບໍ, ພຣະອົງເປັນຜູ້ທີ່ແທງອະສູນຮ້າຍບໍ່ແມ່ນບໍ?
[10]ພຣະອົງໄດ້ຊົງເຮັດໃຫ້ທະເລເຫືອດແຫ້ງໄປຄືນ້ຳທີ່ເລິກນັ້ນແລະຊົງເຮັດໃຫ້ບ່ອນເລິກຂອງທະເຫນັ້ນກາຍເປັນທາງແກ່ຜູ້ທີ່ໄດ້ຮັບການຊົງໄຖ່ໃຫ້ຜ່ານໄປບໍ່ແມ່ນບໍ?
[11]ພວກທີ່ໄດ້ຊົງໄຖ່ໄວ້ຂອງພຣະຢາເວຈະກັບມາແລະມາຮອດຊີໂອນດ້ວຍສຽງຮ້ອງແຫ່ງຄວາມຊື່ນບານແລະດ້ວຍຄວາມຍິນດີເທິງຫົວຂອງພວກເຂົາຕະຫລອດໄປ
ຄວາມປິຕິຍິນດີແລະຄວາມສຸກຈະເຕັມລົ້ນໃນພວກເຂົາ, ແລະຄວາມໂສກເສົ້າແລະຄວາມທຸກໃຈຈະຫນີຈາກໄປ.
[12]ເຮົາ, ເຮົາ, ເຮົາແມ່ນຜູ້ທີ່ປອບໂຍນເຈົ້າ. ເປັນຫຍັງເຈົ້າຈຶ່ງຢ້ານມະນຸດ, ຜູ້ທີ່ຈະຕ້ອງຕາຍ,
ບັນດາລູກຫລານຂອງມະນຸດຜູ້ທີ່ຖືກສ້າງມາເຫມືອນກັບຕົ້ນຫຍ້າ?
[13]ເປັນຫຍັງເຈົ້າຈຶ່ງໄດ້ລືມພຣະຢາເວພຣະຜູ້ສ້າງຂອງເຈົ້າ, ຜູ້ໄດ້ກາງທ້ອງຟ້າອອກແລະຊົງວາງຮາກຖານຂອງແຜ່ນດິນໂລກ?
ເຈົ້າຍັງຢູ່ໃນສະພາບທີ່ຫວາດກົວທຸກໆມື້ຍ້ອນຄວາມຄຽດແຄ້ນຂອງຜູ້ກົດຂີ່ຂົ່ມເຫັງເມື່ອເຂົາຕັ້ງໃຈທີ່ຈະທຳລາຍ.
ຄວາມໂກດແຄ້ນຂອງຜູ້ທີ່ກົດຂີ່ຂົ່ມເຫັງນັ້ນຢູ່ໃສເດ?
[14]ຄົນທີ່ກົ້ມຕົວລົງ, ພຣະຢາເວຈະຊົງຮີບຈະປົດປ່ອຍ; ເຂົາຈະບໍ່ຕາຍແລະບໍ່ລົງໄປໃນຂຸມນັ້ນ, ແລະເຂົາຈະບໍ່ຂາດເຂີນອາຫານ.
[15]ເພາະວ່າເຮົາແມ່ນພຣະຢາເວພຣະເຈົ້າຂອງເຈົ້າ, ຜູ້ທີ່ກວນທະເລໃຫ້ປັ່ນປ່ວນເພື່ອໃຫ້ຄື້ນທະເລຄະນອງສຽງ -
ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ.
[16]ເຮົາໄດ້ໃສ່ຖ້ອຍຄຳຂອງເຮົາໄວ້ໃນປາກຂອງເຈົ້າ, ແລະ ເຮົາໄດ້ປົກຄຸມເຈົ້າໄວ້ໃນຮົ່ມເງົາມືຂອງເຮົາ, ເພື່ອທີ່ເຮົາຈະຕັ້ງທ້ອງຟ້າ,
ວາງຮາກຖານຂອງແຜ່ນດິນໂລກ, ແລະ ເວົ້າກັບຊີໂອນວ່າ,' ເຈົ້າເປັນປະຊາຊົນຂອງເຮົາ. '"
[17]ຈົ່ງຕື່ນຂຶ້ນ, ຕື່ນຂຶ້ນເຖີດ, ຈົ່ງຢືນຂຶ້ນເຖີດ, ເຢຣູຊາເລັມເອີຍ,
ເຈົ້າຜູ້ທີ່ໄດ້ດື່ມຈາກພຣະຫັດຂອງພຣະຢາເວຈາກຖ້ວຍແຫ່ງຄວາມໂກດຮ້າຍຂອງພຣະອົງ; ເຈົ້າຜູ້ທີ່ໄດ້ດື່ມຈາກຖ້ວຍນັ້ນ,
ຈາກຖ້ວຍແຫ່ງຄວາມໂຊເຊລົງໄປຈົນເຖິງກົ້ນຕະກອນ.[18]ບໍ່ມີໃຜໃນບັນດາພວກລູກຊາຍທີ່ນາງເກີດມານັ້ນທີ່ຈະນຳທາງນາງໄດ້;
ບໍ່ມີໃຜໃນບັນດາລູກຊາຍທັງຫມົດທີ່ໄດ້ດຶງເອົາມືຂອງນາງໃຫ້ລຸກຂຶ້ນ.
[19]ຄວາມຍາກລຳບາກສອງສິ່ງນີ້ໄດ້ເກີດຂຶ້ນກັບເຈົ້າ - ໃຜຈະໂສກເສົ້າກັບເຈົ້າແດ່? ຄືຄວາມຫວ່າງເປົ່າແລະການຖືກທຳລາຍ, ແລະ
ການອຶດອາຫານແລະຄົມດາບ. ຜູ້ໃດຈະປອບໂຍນເຈົ້າແດ່?[20]ລູກຊາຍທັງຫລາຍຂອງເຈົ້າໄດ້ລົ້ມລົງ; ພວກເຂົານອນຢູ່ທຸກແຈຖະຫນົນທຸກແຫ່ງ,
ເຫມືອນກັບກວາງຕິດຕາຫນ່າງ; ພວກເຂົາເຕັມໄປດ້ວຍຄວາມໂກດຮ້າຍຂອງພຣະຢາເວ, ດ້ວຍອຳນາດຂອງພຣະເຈົ້າຂອງພວກເຈົ້າ.
[21]ແຕ່ບັດນີ້ຈົ່ງຟັງເລື່ອງນີ້, ເຈົ້າຜູ້ຖືກກົດຂີ່ຂົ່ມເຫັງແລະມຶນເມົາ, ແຕ່ບໍ່ໄດ້ເມົາດ້ວຍເຫລົ້າອາງຸ່ນ:[22]ພຣະຢາເວອົງພຣະຜູ້ເປັນເຈົ້າຂອງເຈົ້າ,
ຜູ້ຊົງສູ້ຄະດີເພື່ອປະຊາຊົນ, ຂອງພຣະອົງກ່າວດັ່ງນີ້ວ່າ," ເບິ່ງແມ, ເຮົາໄດ້ເອົາຖ້ວຍແຫ່ງຄວາມໂຊເຊອອກໄປຈາກມືຂອງເຈົ້າແລ້ວ
ຄືຖ້ວຍນັ້ນທີ່ເປັນຖ້ວຍແຫ່ງຄວາມໂກດຮ້າຍຂອງເຮົາ - ເພື່ອທີ່ເຈົ້າຈະບໍ່ໄດ້ດື່ມມັນອີກຕໍ່ໄປ.
[23]ເຮົາຈະໃສ່ມັນໄວ້ໃນມືຂອງຜູ້ທີ່ທໍລະມານເຈົ້າ, ພວກຄົນທີ່ໄດ້ເວົ້າກັບເຈົ້າວ່າ, 'ຈົ່ງນອນລົງ, ເພື່ອພວກເຮົາຈະຍ່າງຂ້າມຕົວເຈົ້າ';
ເຈົ້າຈຶ່ງເຮັດໃຫ້ຫລັງຂອງເຈົ້າເຫມືອນພື້ນດິນແລະເປັນເຫມືອນຖະຫນົນເພື່ອໃຫ້ພວກເຂົາຈະຍ່າງຢຽບໄປເທິງເຈົ້າ."


generated on Tue Jun 17 19:01:42 2025

52 [1]ຈົ່ງຕື່ນຂຶ້ນ, ຕື່ນຂຶ້ນເຖີດ, ຊີໂອນເອີຍ; ຈົ່ງສວມໃສ່ກຳລັງຂອງເຈົ້າ, ກຸງເຢຣູຊາເລັມ, ເມືອງບໍລິສຸດເອີຍ;
ຈົ່ງໃສ່ເສື້ອຜ້າທີ່ສວຍງາມຂອງເຈົ້າເພາະວ່າຄົນທີ່ບໍ່ເຂົ້າພິທີຕັດຫລືຜູ້ທີ່ເປັນມົນທິນຈະບໍ່ເຂົ້າມາໃນເຈົ້າອີກຕໍ່ໄປ.

[2]ຈົ່ງສັນຂີ້ຝຸ່ນດິນອອກຈາກຕົວເຈົ້າເອງ; ຈົ່ງລຸກຂຶ້ນແລະນັ່ງ, ເຢຣູຊາເລັມເອີຍ, ທິດາຂອງຊີໂອນທີ່ເປັນຊະເລີຍ, ຈົ່ງປົດໂສ້, ອອກຈາກຄໍຂອງເຈົ້າ.
[3]ເພາະພຣະຢາເວກ່າວດັ່ງນີ້ວ່າ," ພວກເຈົ້າໄດ້ຖືກຂາຍໄປເປົ່າໆ, ແລະພວກເຈົ້າຈະໄດ້ຮັບການໄຖ່ໂດຍບໍ່ໃຊ້ເງິນ."
[4]ເພາະສິ່ງທີ່ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້: ໃນຕອນເລີ່ມຕົ້ນປະຊາຊົນຂອງເຮົາໄດ້ລົງໄປໃນເອຢິບເພື່ອອາໄສຢູ່ຊົ່ວຄາວ;
ແລະອັດຊີເຣຍໄດ້ກົດຂີ່ຂົ່ມເຫັງພວກເຂົາເມື່ອບໍ່ດົນມານີ້.
[5]ນີ້ຄືຄຳປະກາດຂອງພຣະຢາເວວ່າ, ບັດນີ້ ເຮົາຕ້ອງເຮັດຫຍັງທີ່ນີ້ເພື່ອເບິ່ງວ່າປະຊາຊົນຂອງເຮົາໄດ້ຖືກເອົາໂຕໄປໂດຍເປົ່າໆບໍ່?
ນີ້ຄືຄຳປະກາດຂອງພຣະຢາເວວ່າຜູ້ຄົນທີ່ປົກຄອງພວກເຂົາກໍ່ເຍາະເຍີ້ຍ ແລະ
ນາມຂອງເຮົາກໍ່ຖືກຫມິ່ນປະຫມາດເລື້ອຍມາຕະຫລອດວັນຍັງຄ່ຳ.[6]ສະນັ້ນຊົນຊາດຂອງເຮົາຈະຮູ້ຈັກຊື່ຂອງເຮົາ;
ພວກເຂົາຈະຮູ້ໃນມື້ນັ້ນເຊິ່ງເຮົາເປັນຜູ້ດຽວທີ່ກ່າວວ່າ "ແມ່ນແລ້ວ, ຄືເຮົາເອງນີ້ແຫລະ!"
[7]ບັນດາຕີນຂອງຜູ້ສື່ງຂ່າວສານທີ່ນຳຂ່າວດີເທິງພູເຂົາທັງຫລາຍຊ່າງງົດງາມແທ້ນໍ, ຜູ້ທີ່ປະກາດສັນຕິສຸກ, ຜູ້ທີ່ນຳຂ່າວດີ,
ຜູ້ປະກາດຂ່າວແຫ່ງຄວາມລອດ, ຜູ້ທີ່ກ່າວກັບສີໂອນວ່າ: "ພຣະເຈົ້າຂອງເຈົ້າຊົງຄອບຄອງ!"[8]ຈົ່ງຟັງເຖີດ,
ຄົນຍາມຂອງພວກເຈົ້າໄດ້ເປັ່ງສຽງຮ້ອງຂອງພວກເຂົາ, ພວກເຂົາພ້ອມກັນຮ້ອງດ້ວຍຄວາມເບີກບານມ່ວນຊື່ນ,
ເພາະວ່າພວກເຂົາຈະເຫັນດ້ວຍຕາທຸກດວງຂອງພວກເຂົາ, ພຣະຢາເວສະເດັດກັບມາຍັງຊີໂອນ.
[9]ຈົ່ງເປັ່ງສຽງຮ້ອງເພງດ້ວຍຄວາມຊື່ນບານດ້ວຍກັນ, ເຈົ້ານະຄອນເຢລູຊາເລັມເອີຍ; ເພາະວ່າພຣະຢາເວໄດ້ຊົງເລົ້າໂລມຊົນຊາດຂອງພຣະອົງ,
ພຣະອົງໄດ້ຊົງໄຖ່ເມືອງເຢຣູຊາເລັມແລ້ວ.[10]ພຣະເຈົ້າຢາເວໄດ້ຊົງເຜີຍໃຫ້ເຫັນແຂນທີ່ບໍລິສຸດຂອງພຣະອົງຕໍ່ໜ້າ ປະຊາຊາດທັງປວງ;
ທົ່ວແຜ່ນດິນໂລກຈະເຫັນຄວາມລອດພົ້ນຂອງພຣະເຈົ້າຂອງພວກເຮົາ.
[11]ຈົ່ງອອກຈາກ, ອອກໄປເຖີດ, ອອກໄປຈາກບ່ອນນັ້ນ; ຢ່າແຕະຕ້ອງສິ່ງທີ່ເປັນມົນທິນ; ຈົ່ງອອກໄປຈາກທ່າມກາງເມືອງນັ້ນ,
ພວກເຈົ້າທີ່ຂົນພາຊະນະທັງຫລາຍຂອງພຣະຢາເວຈົ່ງຊຳລະລ້າງຕົວໃຫ້ບໍລິສຸດ.[12]ເພາະພວກເຈົ້າບໍ່ຕ້ອງຟ້າວຟັ່ງອອກໄປ,
ຫລືພວກເຈົ້າບໍ່ຕ້ອງອອກໄປແບບຢ້ານກົວ; ເພາະວ່າ ພຣະຢາເວ ຈະສະເດັດນຳຫນ້າພວກເຈົ້າ;
ແລະພຣະເຈົ້າຂອງອິດສະຣາເອນຈະເປັນກອງຫລັງຂອງພວກເຈົ້າ.
[13]ເບິ່ງແມ, ຜູ້ຮັບໃຊ້ຂອງເຮົາຈະກະທຳການຢ່າງມີປັນຍາ; ເຂົາຈະສູງເດັ່ນແລະໄດ້ຮັບການຍົກຊູ, ແລະເຂົາຈະໄດ້ຮັບການຍົກຍ່ອງ.
[14]ໃນຫລາຍຄົນມີຄວາມຕື່ນຕົກໃຈຕໍ່ເຈົ້າສັນໃດ ຮູບຮ່າງຫນ້າຕາຂອງເຈົ້າກໍ່ຫນ້າກຽດຊັງກວ່າມະນຸດຄົນອື່ນສັນນັ້ນ,
ແລະຮູບຮ່າງຂອງເຈົ້າບໍ່ໄດ້ເປັນຄືກັບມະນຸດອີກຕໍ່ໄປ.
[15]ແມ່ນວ່າຈະເປັນເຊັ່ນນັ້ນ, ຜູ້ຮັບໃຊ້ຂອງເຮົາຈະເຮັດໃຫ້ຫລາຍຊົນຊາດງຶດງ້ ແລະ ກະສັດທັງຫລາຍກໍ່ຈະປາກບໍ່ອອກຍ້ອນເຂົາ.
ເພາະພວກເຂົາຈະໄດ້ເຫັນສິ່ງທີ່ບໍ່ມີໃຜເຄີຍບອກພວກເຂົາ, ແລະ ພວກເຂົາຈະເຂົ້າໃຈໃນສິ່ງທີ່ພວກເຂົາບໍ່ເຄີຍໄດ້ຍິນ.

 generated on Tue Jun 17 19:01:42 2025

53 [1]ມີໃຜໄດ້ເຊື່ອສິ່ງທີ່ພວກເຂົາໄດ້ຍິນຈາກພວກເຮົາ, ແລະ ແຂນຂອງພຣະຢາເວໄດ້ຊົງສຳແດງຕໍ່ຜູ້ໃດ?
[2]ເພາະທ່ານໄດ້ເຕີບໂຕຂຶ້ນຕໍ່ພຣະພັກພຣະຢາເວເຫມືອນກັບຕົ້ນອ່ອນ, ແລະເຫມືອນຫນໍ່ທີ່ແຕກອອກມາຈາກພື້ນດິນທີ່ແຫ້ງແລ້ງ;
ທ່ານບໍ່ມີຮູບຮ່າງທີ່ງົດງາມຫລືສະຫງ່າງາມ; ເມື່ອພວກເຮົາໄດ້ເຫັນທ່ານ, ບໍ່ມີຄວາມງາມທີ່ຈະດຶງດູດພວກເຮົາ.

[3]ທ່ານໄດ້ຖືກຄົນທັງຫລາຍດູຫມິ່ນແລະຖືກປະຕິເສດ; ເປັນຄົນທີ່ໂສກເສົ້າ, ແລະຜູ້ທີ່ຄຸ້ນເຄີຍກັບຄວາມເຈັບປວດ.
ເຫມືອນກັບຄົນຫນຶ່ງທີ່ຄົນທັງຫລາຍຫັນຫນ້າຫນີ, ທ່ານໄດ້ຖືກດູຫມິ່ນ; ແລະພວກເຮົາຖືວ່າທ່ານບໍ່ມີຄວາມສຳຄັນ.
[4]ແຕ່ແນ່ນອນທ່ານໄດ້ແບກຫາບຄວາມເຈັບປ່ວຍຂອງເຮົາແລະແບກຄວາມທຸກທໍລະມານຂອງເຮົາໄປ;
ແຕ່ພວກເຮົາຄິດວ່າທ່ານກຳລັງຖືກລົງໂທດຈາກພຣະເຈົ້າ, ຖືກຕີຈາກພຣະເຈົ້າ, ແລະທຸກທໍລະມານ.
[5]ແຕ່ທ່ານໄດ້ຖືກແທງຍ້ອນການກະທຳທີ່ທໍລະຍົດຂອງພວກເຮົາ; ທ່ານໄດ້ຖືກຂ້ຽນຕີເພາະວ່າຄວາມບາບຂອງພວກເຮົາ.
ການລົງໂທດເພື່ອໃຫ້ເຮົາມີຄວາມສະຫງົບສຸກຕົກຢູ່ເທິງທ່ານ, ແລະດ້ວຍບາດແຜຂອງທ່ານພວກເຮົາຈຶ່ງໄດ້ຮັບການຮັກສາໃຫ້ດີ.
[6]ພວກເຮົາທຸກຄົນເປັນເຫມືອນແກະທີ່ຫລົງທາງໄປ; ພວກເຮົາແຕ່ລະຄົນໄດ້ຫັນໄປຕາມທາງຂອງຕົນເອງ,
ແລະພຣະຢາເວໄດ້ວາງຄວາມຜິດບາບຂອງພວກເຮົາທັງທຸກຄົນໄວ້ເທິງຕົວທ່ານ.
[7]ທ່ານໄດ້ຖືກບີບບັງຄັບ; ແຕ່ເມື່ອທ່ານໄດ້ຖ່ອມຕົວລົງ, ທ່ານບໍ່ໄດ້ເປີດປາກຂອງທ່ານ; ຄືກັບລູກແກະທີ່ຖືກນຳໄປສູ່ການຂ້າ,
ແລະເຫມືອນແກະທີ່ມິດງຽບຢູ່ຕໍ່ຫນ້າຜູ້ທີ່ຕັດຂົນຂອງມັນສັນໃດ, ທ່ານກໍບໍ່ໄດ້ເປີດປາກຂອງທ່ານເລີຍສັນນັ້ນ.
[8]ທ່ານໄດ້ຖືກລົງໂທດດ້ວຍການບີບບັງຄັບແລະການພິພາກສາທ່ານຖືກຕັດສິນລົງໂທດ;
ມີໃຜໃນພວກຄົນຍຸກສະໄຫມນັ້ນໄດ້ຄິດກ່ຽວກັບທ່ານອີກຕໍ່ໄປແດ່? ແຕ່ທ່ານຖືກຕັດອອກຈາກແຜ່ນດິນຂອງຄົນເປັນ;
ເນື່ອງຈາກວ່າການກະທຳຜິດຂອງຊົນຊາດຂອງຂ້ານ້ອຍການລົງໂທດຈຶ່ງຕົກຢູ່ເທິງທ່ານ.[9]ພວກເຂົາວາງສົບຂອງທ່ານໄວ້ກັບພວກອາດຊະຍາກອນ,
ພວກເຂົາໄດ້ວາງຄວາມຕາຍຂອງທ່ານໄວ້ກັບພວກຄົນຮັ່ງມີ, ເຖິງແມ່ນວ່າທ່ານບໍ່ໄດ້ເຮັດຄວາມຮຸນແຮງໃດໆ ແລະ
ບໍ່ມີຄຳຫລອກລວງໃດໆໃນປາກຂອງທ່ານເລີຍ.
[10]ແຕ່ເປັນຄວາມປະສົງຂອງພຣະຢາເວທີ່ຈະເຮັດໃຫ້ທ່ານບວບຊ້ຳແລະເຈັບປ່ວຍ. ເມື່ອທ່ານໄດ້ເອົາຊີວິດຂອງທ່ານເປັນເຄື່ອງບູຊາລົບລ້າງບາບ,
ທ່ານຈຶ່ງໄດ້ເຫັນເຊື້ອສາຍຂອງທ່ານມີອາຍຸຍາວໄກ, ແລະພຣະປະສົງຂອງພຣະຢາເວຈະສຳເລັດຜ່ານທາງທ່ານ.
[11]ຫລັງຈາກຄວາມທຸກທໍລະມານໃນຊີວິດຂອງທ່ານ, ທ່ານຈະເຫັນຄວາມສະຫວ່າງແລະພໍໃຈໂດຍຄວາມຮູ້ຂອງທ່ານ.
ຜູ້ຮັບໃຊ້ທີ່ຊອບທຳຂອງເຮົາຈະຊ່ວຍຄົນໃຫ້ລອດຢ່າງຫລວງຫລາຍ; ທ່ານຈະແບກຄວາມບາບຂອງພວກເຂົາໄປ.
[12]ເພາະສະນັ້ນເຮົາຈະມອບສ່ວນຂອງທ່ານໃຫ້ແກ່ທ່ານທ່າມກາງຄົນຄົນຫລວງຫລາຍ,
ແລະທ່ານຈະແບ່ງຂອງທີ່ຍຶດມານັ້ນກັບຄົນຈຳນວນຫລວງຫລາຍ,
ເພາະວ່າທ່ານໄດ້ສຳແດງຕົວເອງສູ່ຄວາມຕາຍແລະຖືກນັບເຂົ້າກັບຄົນທໍລະຍົດ.
ທ່ານໄດ້ແບກຮັບເອົາຄວາມຜິດບາບຂອງຄົນຫລວງຫລາຍແລະທ່ານໄດ້ອະທິຖານອ້ອນວອນເພື່ອພວກຄົນທໍລະຍົດ.

 generated on Tue Jun 17 19:01:42 2025

54 [1]"ຈົ່ງຮ້ອງເພງເຖີດ, ຍິງທີ່ເປັນຫມັນເອີຍ, ເຈົ້າຜູ້ທີ່ບໍ່ເຄີຍໄດ້ເກີດລູກ; ຈົ່ງເປັ່ງສຽງຮ້ອງເພງດ້ວຍຄວາມຍິນດີແລະຮ້ອງອອກສຽງດັງໆ,
ເຈົ້າຜູ້ທີ່ບໍ່ເຄີຍເຈັບທ້ອງອອກລູກ. ເພາະບັນດາລູກຂອງແມ່ຮ້າງກໍ່ຫລາຍກ່າວລູກທັງຫລາຍຂອງຍິງທີ່ແຕ່ງງານແລ້ວ."

[2]" ຈົ່ງສ້າງເຕັນຂອງເຈົ້າໃຫ້ໃຫຍ່ໂຕແລະຂະຫຍາຍຜ້າກັ້ງເຕັນຂອງເຈົ້າອອກໄປໃຫ້ໄກໆ, ຢ່າຢັ້ງໄວ້;
ຈົ່ງຕໍ່ເຊືອກຂອງເຈົ້າໃຫ້ຍາວຂຶ້ນແລະເສີມເສົາປັກມຸດຂອງເຈົ້າໃຫ້ຫມັ້ນຄົງ[3]ເພາະພວກເຈົ້າຈະຂະຫຍາຍອອກໄປທາງຂວາມືແລະທາງຊ້າຍມື,
ແລະເຊື້ອສາຍຂອງເຈົ້າຈະຄອບຄອງຊົນຊາດທັງຫລາຍ ແລະຕັ້ງຖິ່ນຖານທີ່ຢູ່ໃນຕົວເມືອງທີ່ຖືກທຳລາຍຂຶ້ນມາໃຫມ່.
[4]ຢ່າຢ້ານເລີຍເພາະວ່າເຈົ້າຈະບໍ່ໄດ້ຮັບຄວາມອັບອາຍ, ແລະຢ່າທໍ້ຖອຍເພາະເຈົ້າຈະບໍ່ໄດ້ຮັບຄວາມຫນ້າກຽດຊັງ;
ເຈົ້າຈະລືມຄວາມອັບອາຍຂອງໄວສາວຂອງເຈົ້າແລະລືມຄວາມອັບປະຍົດຂອງການຖືກປະຖິ້ມຂອງເຈົ້າ.
[5]ເພາະວ່າພຣະຜູ້ສ້າງແມ່ນສາມີຂອງເຈົ້າ; ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ.
ອົງບໍລິສຸດຂອງອິດສະຣາເອນເປັນພຣະຜູ້ໄຖ່ຂອງເຈົ້າ; ພຣະອົງຊົງພຣະນາມວ່າພຣະເຈົ້າຂອງແຜ່ນດິນໂລກທັງຫມົດ.
[6]ເພາະວ່າພຣະຢາເວໄດ້ຊົງເອີ້ນເຈົ້າຄືນມາດັ່ງພັນລະຍາທີ່ຖືກປະຖິ້ມແລະໂສກເສົ້າໃນຈິດວິນຍານ,
ເຫມືອນກັບຜູ້ຍິງທີ່ແຕ່ງງານແຕ່ຕອນຍັງເປັນສາວແລະຖືກປະຖິ້ມ," ພຣະເຈົ້າຂອງເຈົ້າກ່າວດັ່ງນີ້.
[7]"ໃນໄລຍະເວລາສັ້ນໆເຮົາໄດ້ປະຖິ້ມເຈົ້າ, ແຕ່ເຮົາຈະຮວບຮວມເຈົ້າດ້ວຍຄວາມເມດຕາສົງສານຍິ່ງຫນັກ.
[8]ເຮົາໄດ້ເຊື່ອງຫນ້າຂອງເຮົາຈາກເຈົ້າໃນໄລຍະເວລາຫນຶ່ງດ້ວຍຄວາມໂກດຮ້າຍອັນໃຫຍ່,
ແຕ່ດ້ວຍຄວາມຊື່ສັດແຫ່ງພັນທະສັນຍານິລັນດອນເຮົາຈະມີຄວາມເມດຕາຕໍ່ເຈົ້າ. ພຣະຢາເວ ຜູ້ຊົງຊ່ວຍກູ້ເຈົ້າກ່າວດັ່ງນີ້.
[9]ເພາະສຳລັບເຮົານີ້ເປັນເຫມືອນນ້ຳຖ້ວມສະໄຫມຂອງໂນອາ: ເຮົາໄດ້ປະຕິຍານວ່ານ້ຳສະໄຫມໂນອາຈະບໍ່ຖ້ວມແຜ່ນດິນໂລກອີກສັນໃດ,
ເຮົາກໍ່ຈະປະຕິຍານວ່າເຮົາຈະບໍ່ໂກດຮ້າຍເຈົ້າຫລືຕຳນິເຈົ້າສັນນັ້ນ.
[10]ເຖິງແມ່ນວ່າພູເຂົາທັງຫລາຍຈະເຈື່ອນລົງແລະເນີນພູທັງຫລາຍຈະສັ່ນສະເທືອນ, ແຕ່ຄວາມຮັກທີ່ຫມັ້ນ ຄົງຂອງເຮົາຈະບໍ່ຫນີໄປຈາກເຈົ້າ,
ແລະພັນທະສັນຍາສັນແຫ່ງສັນຕິສຸກຂອງເຮົາຈະບໍ່ສັ່ນໄຫວ - ພຣະຢາເວ ຜູ້ທີ່ມີຄວາມເມດຕາກະລຸນາຕໍ່ເຈົ້າກ່າວດັ່ງນີ້.
[11]ເຈົ້າຜູ້ທຸກໃຈ, ຜູ້ຖືກລົມພາຍຸພັດແລະຜູ້ທີ່ຍາກລຳບາກ, ເບິ່ງແມ, ເຮົາຈະເຮັດທາງເດີນຂອງເຈົ້າດ້ວຍຫີນມໍລະກົດ,
ແລະວາງຮາກຖານຂອງເຈົ້າດ້ວຍໄພລິນ.[12]ເຮົາຈະສ້າງບັນດາເມືອງຂອງເຈົ້າດ້ວຍທັບທິມແລະປະຕູຮົ້ວຂອງເຈົ້າດ້ວຍຫີນປະກາຍ,
ແລະສ້າງກຳແພງດ້ານນອກຂອງເຈົ້າດ້ວຍຫີນທີ່ສວຍງາມ.
[13]ແລ້ວພຣະຢາເວຈະຊົງສອນບຸດທຸກຄົນຂອງເຈົ້າ; ແລະບຸດທັງຫລາຍຂອງເຈົ້າຈະມີຄວາມສະຫງົບສຸກຢ່າງຫລວງຫລາຍ.
[14]ເຮົາຈະສ້າງເຈົ້າຄືນໃຫມ່ດ້ວຍຄວາມຊອບທຳ. ເຈົ້າຈະບໍ່ປະສົບກັບການຖືກຂົ່ມເຫັງອີກຕໍ່ໄປ, ເພາະວ່າເຈົ້າຈະບໍ່ຢ້ານກົວ,
ແລະບໍ່ມີສິ່ງໃດທີ່ເຮັດໃຫ້ເຈົ້າຢ້ານກົວຈະມາໃກ້ເຈົ້າ.
[15]ເບິ່ງແມ, ຖ້າຜູ້ໃດປຸກປັ່ນໃຫ້ເກີດຄວາມຍາກລຳບາກ, ມັນຈະບໍ່ໄດ້ເກີດມາຈາກເຮົາ;
ຜູ້ໃດທີ່ກໍ່ໃຫ້ເກີດບັນຫາກັບເຈົ້າຈະລົ້ມລົງໃນຄວາມພ່າຍແພ້.[16]ເບິ່ງແມ, ເຮົາໄດ້ສ້າງຊ່າງຝີມື, ຜູ້ທີ່ເປົ່າໄຟຈາກຖ່ານ ແລະ
ແລະເຮັດໃຫ້ເກີດອາວຸດເປັນຜົນງານຂອງເຂົາ, ແລະເຮົາໄດ້ສ້າງຜູ້ທຳລາຍເພື່ອທີ່ຈະທຳລາຍ.
[17]ບໍ່ມີອາວຸດໃດໆທີ່ເຮັດຂຶ້ນເພື່ອຕໍ່ສູ້ເຈົ້າຈະສຳເລັດໄດ້; ແລະ ເຈົ້າຈະລົງໂທດທຸກຄົນທີ່ກ່າວຫາເຈົ້າ. ນີ້ແມ່ນມໍລະດົກຂອງບັນດາຜູ້ຮັບໃຊ້ຂອງ
ພຣະຢາເວ, ແລະການປົກປ້ອງຈາກເຮົາ - ນີ້ຄືຄຳປະກາດຂອງພຣະຢາເວ."

 generated on Tue Jun 17 19:01:42 2025

55 [1]"ມາເຖີດ, ທຸກຄົນຜູ້ທີ່ຫິວນ້ຳ, ຈົ່ງມາບ່ອນທີ່ມີນ້ຳ, ແລະເຈົ້າຜູ້ທີ່ບໍ່ມີເງິນ, ຈົ່ງມາ, ຊື້ແລະກິນເຂົ້າເຖີດ! ຈົ່ງຊື້, ເຫລົ້າອາງຸ່ນ ແລະ
ນ້ຳນົມໂດຍບໍ່ຕ້ອງເສຍເງິນ ແລະ ບໍ່ຕ້ອງເສຍຄ່າໃຊ້ຈ່າຍ.

[2]ເປັນຫຍັງເຈົ້າຈຶ່ງໃຊ້ເງິນສຳລັບສິ່ງທີ່ບໍ່ແມ່ນອາຫານ, ແລະເປັນຫຍັງພວກເຈົ້າຕ້ອງໃຊ້ແຮງງານສຳລັບສິ່ງທີ່ບໍ່ເຮັດໃຫ້ອີ່ມໃຈ?
ຈົ່ງຕັ້ງໃຈຟັງເຮົາແລະກິນສິ່ງທີ່ດີ, ແລະເຮັດໂຕພວກເຈົ້າເອງໃຫ້ປິຕິຍິນດີໃນອາຫານອັນດີ.
[3]ຈົ່ງອ່ຽງຫູຂອງພວກເຈົ້າແລະມາຫາເຮົາ! ຈົ່ງຟັງ, ເພື່ອພວກເຈົ້າຈະມີຊີວິດຢູ່! ເຮົາຈະເຮັດພັນທະສັນຍານິລັນດອນກັບພວກ ເຈົ້າ:
ຕາມສັນຍາທີ່ວາງໃຈໄດ້, ແລະຄວາມຮັກທີ່ຊື່ສັດຂອງເຮົາຕໍ່ດາວິດ.[4]ຈົ່ງເບິ່ງ, ເຮົາໄດ້ຕັ້ງເຂົາໄວ້ເປັນພະຍານຕໍ່ປະຊາຊາດທັງຫລາຍ,
ທັງເປັນຜູ້ນຳແລະຜູ້ບັນຊາການແກ່ປະຊາຊົນທັງຫລາຍ.
[5]ເບິ່ງແມ, ພວກເຈົ້າຈະເອີ້ນຊົນຊາດຫນຶ່ງທີ່ພວກເຈົ້າບໍ່ຮູ້ຈັກ;
ແລະປະຊາຊາດທີ່ບໍ່ຮູ້ຈັກພວກເຈົ້າຈະແລ່ນມາຫາພວກເຈົ້າເພາະວ່າພຣະຢາເວພຣະເຈົ້າຂອງພວກເຈົ້າ, ອົງບໍລິສຸດຂອງອິດສະຣາເອນ,
ຜູ້ທີ່ຊົງໃຫ້ພວກເຈົ້າໄດ້ຮັບກຽດ."
[6]ຈົ່ງສະແຫວງຫາພຣະຢາເວໃນຂະນະທີ່ຈະພົບພຣະອົງໄດ້; ຈົ່ງຮ້ອງຫາພຣະອົງໃນຂະນະທີ່ພຣະອົງຊົງຢູ່ໃກ້ໆ.
[7]ຂໍໃຫ້ຄົນອະທຳປະຖິ້ມທາງຂອງເຂົາ, ແລະ ໃຫ້ຄົນບາບປະຖິ້ມຄວາມຄິດຂອງເຂົາ. ໃຫ້ເຂົາກັບຄືນມາຫາ ພຣະຢາເວ, ແລະ
ພຣະອົງຈະຊົງເມດຕາສົງສານເຂົາ, ແລະ ມາຫາພຣະເຈົ້າ, ຂອງພວກເຮົາຜູ້ທີ່ຈະໃຫ້ອະໄພເຂົາຢ່າງເຫລືອລົ້ນ.
[8]"ເພາະວ່າຄວາມຄິດຂອງເຮົາບໍ່ແມ່ນຄວາມຄິດຂອງພວກເຈົ້າ, ແລະທາງຂອງພວກເຈົ້າກໍບໍ່ແມ່ນທາງຂອງເຮົາ,
ນີ້ແມ່ນຄຳປະກາດຂອງພຣະຢາເວ[9]ເພາະວ່າທ້ອງຟ້າສູງກວ່າແຜ່ນດິນໂລກສັນໃດ, ທາງຂອງເຮົາກໍສູງກວ່າທາງຂອງພວກເຈົ້າ,
ແລະຄວາມຄິດຂອງເຮົາກໍສູງກວ່າຄວາມຄິດຂອງພວກເຈົ້າສັນນັ້ນ.
[10]ເພາະເຫມືອນຝົນແລະຫິມະຕົກລົງມາຈາກທ້ອງຟ້າ ແລະ
ບໍ່ກັບຄືນໄປບ່ອນນັ້ນອີກນອກຈາກຈະເຮັດໃຫ້ແຜ່ນດິນໂລກປຽກຊຸ່ມແລະເຮັດໃຫ້ມັນເກີດຜົນ ແລະ
ແຕກຫນໍ່ແລະໃຫ້ເມັດພັນແກ່ຊາວນາຜູ້ທີ່ຫວ່ານແລະໃຫ້ເຂົ້າຈີ່ແກ່ຜູ້ທີ່ກິນ:
[11]ເຊັ່ນດຽວກັນຖ້ອຍຄຳຂອງເຮົາທີ່ອອກຈາກປາກຂອງເຮົາຖ້ອຍຄຳນັ້ນຈະບໍ່ກັບຄືນມາຫາເຮົາໂດຍບໍ່ມີປະໂຫຍດ,
ແຕ່ຈະເຮັດໃຫ້ສິ່ງທີ່ເຮົາປາຖະຫນາ ສຳເລັດ, ແລະຈະເຮັດໃຫ້ສິ່ງທີ່ເຮົາໄດ້ໃຊ້ໄປເຮັດນັ້ນສຳເລັດ.
[12]ເພາະວ່າພວກເຈົ້າຈະອອກໄປດ້ວຍຄວາມປິຕິຍິນດີແລະຖືກນຳພາໄປຢ່າງສະຫວັດດີພາບ;
ພູເຂົາແລະເນີນພູຕ່າງໆຈະຮ້ອງອອກມາດ້ວຍສຽງຮ້ອງດ້ວຍຄວາມຍິນດີຕໍ່ຫນ້າພວກເຈົ້າ, ແລະຕົ້ນໄມ້ທຸກຕົ້ນໃນທົ່ງນາຈະຕົບມື.
[13]ຕົ້ນສົນຈະເກີດຂຶ້ນແທນໃນບ່ອນທີ່ມີພຸ່ມຫນາມ, ແລະຕົ້ນນ້ຳມັນຫອມຈະປົ່ງແທນຕົ້ນຫນາມ, ແລະມັນຈະເປັນຢ່າງນັ້ນແກ່ພຣະຢາເວ,
ແກ່ພຣະນາມຂອງພຣະອົງ, ເຊິ່ງຈະເປັນຫມາຍສຳຄັນອັນຕະຫລອດໄປທີ່ຈະບໍ່ຖືກຕັດອອກເລີຍ."

 generated on Tue Jun 17 19:01:42 2025

56 [1]ນີ້ແມ່ນສິ່ງທີ່ພຣະຢາເວກ່າວວ່າ, "ຈົ່ງຖືຮັກສາສິ່ງທີ່ຊອບທຳ, ຈົ່ງເຮັດໃນສິ່ງທີ່ຍຸດຕິທຳ; ເພາະຄວາມລອດຂອງເຮົາມາໃກ້ແລ້ວ,
ແລະຄວາມຊອບ ທຳຂອງເຮົາຈະໄດ້ສຳແດງອອກມາ.[2]ຄວາມສຸກມີແກ່ຄົນທີ່ເຮັດສິ່ງນີ້, ແລະຜູ້ທີ່ຍຶດມັນໄວ້ແໜ້ນ.
ເຂົາຖືຮັກສາວັນສະບາໂຕ, ບໍ່ເຮັດໃຫ້ວັນນັ້ນເປັນມົນທິນ, ແລະຮັກສາມືຂອງເຂົາໃຫ້ພົ້ນຈາກການເຮັດຊົ່ວໃດໆ.”

[3]ຢ່າໃຫ້ຄົນຕ່າງຊາດຜູ້ທີ່ໄດ້ກາຍມາເປັນຜູ້ຕິດຕາມພຣະຢາເວເວົ້າວ່າ, "ພຣະຢາເວ
ຈະຊົງແຍກຂ້ອຍອອກຈາກຊົນຊາດຂອງພຣະອົງຢ່າງແນ່ນອນ." ຂັນທີກໍບໍ່ຄວນເວົ້າວ່າ,“ ເບິ່ງແມ, ຂ້ອຍເປັນຕົ້ນໄມ້ທີ່ຫ່ຽວແຫ້ງ.”
[4]ເພາະພຣະຢາເວກ່າວດັ່ງນີ້ວ່າ,“ ພວກຄົນເທື່ອຍທີ່ຖືວັນຊະບາໂຕຂອງເຮົາ ແລະ ເລືອກສິ່ງທີ່ເຮັດໃຫ້ເຮົາພໍໃຈ, ແລະ
ຍຶດໝັ້ນໃນພັນທະສັນຍາຂອງເຮົາ,[5]ເຮົາຈະຕັ້ງອານຸສອນສະຖານໃຫ້ແກ່ພວກເຂົາໃນພຣະວິຫານຂອງເຮົາແລະພາຍໃນກຳແພງຂອງເຮົາ,
ທີ່ດີກວ່າການມີບັນດາບຸດຊາຍແລະບຸດຍິງ. ເຮົາຈະມອບອະນຸສອນສະຖານນິລັນດອນໃຫ້ພວກເຂົາທີ່ຈະບໍ່ຖືກຕັດອອກເລີຍ.
[6]ເຊັ່ນດຽວກັບພວກຄົນຕ່າງຊາດທີ່ຜູກພັນຕົນເອງກັບພຣະຢາເວ - ເພື່ອຮັບໃຊ້ພຣະອົງ, ແລະຜູ້ທີ່ຮັກພຣະນາມຂອງພຣະຢາເວ,
ແລະນະມັດສະການພຣະອົງ, ທຸກໆຄົນທີ່ຖືຮັກສາວັນສະບາໂຕ ແລະ ຜູ້ທີ່ບໍ່ເຮັດໃຫ້ວັນນັ້ນເປັນມົນທິນ,
ແລະຜູ້ທີ່ຍຶດໝັ້ນພັນທະສັນຍາຂອງເຮົາ,[7]ເຮົາຈະນຳພວກເຂົາໄປສູ່ພູເຂົາບໍລິສຸດຂອງເຮົາ ແລະ
ເຮັດໃຫ້ພວກເຂົາມີຄວາມສຸກຢູ່ໃນວິຫານແຫ່ງການອະທິຖານຂອງເຮົາ;
ເຮົາຈະຍອມຮັບເຄື່ອງເຜົາບູຊາແລະເຄື່ອງຖວາຍບູຊາທັງຫລາຍຂອງພວກເຂົາເທິງແທ່ນບູຊາຂອງເຮົາ.
ເພາະວິຫານຂອງເຮົາຈະຖືກເອີ້ນວ່າເປັນວິຫານແຫ່ງການອະທິຖານສຳລັບທຸກປະຊາຊາດ,
[8]ນີ້ແມ່ນການປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ, ຜູ້ທີ່ເຕົ້າໂຮມຄົນອິດສະຣາເອນທີ່ຖືກຂັບໄລ່ອອກໄປ -
ເຮົາຍັງຈະຮວບຮວມຄົນອື່ນໆມາເພີ່ມຕື່ມເຂົ້າກັບພວກເຂົາດ້ວຍ."
[9]ພວກເຈົ້າສັດປ່າທັງຫລາຍໃນທົ່ງຈົ່ງມາແລະກິນຢ່າງເຕັມທີ່, ທັງພວກເຈົ້າສັດປ່າທັງຫລາຍໃນປ່າອີກດ້ວຍ!
[10]ຄົນເຝົ້າຍາມຂອງພວກເຂົາທຸກຄົນຕາບອດໄປ, ພວກເຂົາບໍ່ເຂົ້າໃຈ. ພວກເຂົາທຸກຄົນເປັນດັ່ງໝາທີ່ມິດງຽບທີ່ເຫົ່າບໍ່ໄດ້. ພວກເຂົາຝັນ,
ແລະນອນລົງ ພວກເຂົາຮັກໃນການນອນ.
[11]ໝາທີ່ຫິວອາຫານ; ພວກເຂົາບໍ່ເຄີຍພຽງພໍ; ພວກເຂົາເປັນຜູ້ລ້ຽງແກະທີ່ບໍ່ມີຄວາມເຂົ້າໃຈ; ພວກເຂົາທຸກຄົນໄດ້ຫັນໄປຕາມທາງຂອງຕົນເອງ,
ແຕ່ລະຄົນລ້ວນແຕ່ຢາກໄດ້ຮັບຜົນປະໂຫຍດທີ່ບໍ່ຍຸດຕິທຳ.[12]ພວກເຂົາເວົ້າວ່າ, "ມາເຖີດ," ໃຫ້ພວກເຮົາດື່ມເຫລົ້າອາງຸ່ນ.
ມື້ອື່ນກໍຈະເຫມືອນກັບມື້ນີ້, ທີ່ເປັນມື້ທີ່ຍິ່ງໃຫຍ່ເຫລືອຄະນານັບ. ".


generated on Tue Jun 17 19:01:42 2025

57 [1]ຄົນຊອບທຳຈິບຫາຍໄປ, ແຕ່ບໍ່ມີໃຜໃສ່ໃຈເລື່ອງນີ້, ແລະຜູ້ຄົນສັດຊື່ໃນພັນທະສັນຍາຈະຖືກຮວບຮວມເອົາໄປ,
ແຕ່ບໍ່ມີໃຜເຂົ້າໃຈວ່າຄົນຊອບທຳຖືກເຕົ້າໂຮມເອົາໄປຈາກຄວາມຊົ່ວຮ້າຍ.[2]ເຂົາເຂົ້າໄປໃນສັນຕິສຸກ;
ພວກເຂົາພັກສະຫງົບຢູ່ໃນຕຽງນອນຂອງພວກເຂົາ, ຄົນເຫລົ່ານັ້ນຜູ້ທີ່ດຳເນີນໃນຄວາມທ່ຽງທຳຂອງພວກເຂົາ.

[3]ແຕ່ຈົ່ງເຂົ້າມາທີ່ນີ້ພວກເຈົ້າລູກຊາຍຂອງແມ່ມົດ, ພວກລູກຫລານຂອງຄົນຫລິ້ນຊູ້ ແລະຜູ້ຍິງທີ່ເປັນໂສເພນີ.
[4]ພວກເຈົ້າທັງຫລາຍກຳລັງເຍາະເຍີ້ຍຢ່າງສະຫນຸກສະຫນານຕໍ່ຜູ້ໃດ? ພວກເຈົ້າກຳລັງອ້າປາກແລະແລບລີ້ນໃສ່ຜູ້ໃດ?
ພວກເຈົ້າເປັນລູກຂອງການທໍລະຍົດ, ເປັນລູກຂອງການຫລອກລວງບໍ່ແມ່ນບໍ?
[5]ພວກເຈົ້າເຮັດໃຫ້ຕົນເອງອົບອຸ່ນຂຶ້ນດ້ວຍການນອນຢູ່ນຳກັນພາຍໃຕ້ຕົ້ນໂອກ, ພາຍໃຕ້ຕົ້ນໄມ້ຂຽວສົດທຸກຕົ້ນ,
ພວກເຈົ້າຜູ້ທີ່ຂ້າບຸດທັງຫລາຍຂອງພວກເຈົ້າຢູ່ໃນກົ້ນແມ່ນ້ຳທີ່ເຫືອດແຫ້ງ, ພາຍໃຕ້ໂງ່ນຫີນທີ່ຍື່ນອອກມາ.
[6]ໃນບັນດາຫີນທີ່ກ້ຽງຂອງຮ່ອມພູແມ່ນ້ຳເປັນສິ່ງທີ່ໄດ້ມອບໃຫ້ເຈົ້າ. ສິ່ງເຫລົ່ານັ້ນເປັນສິ່ງຂອງທີ່ເປັນຂອງຖວາຍຂອງພວກເຈົ້າ.
ພວກເຈົ້າຖອກເຄື່ອງດື່ມບູຊາຂອງເຈົ້າເທິງສິ່ງເຫລົ່ານັ້ນ ແລະ ນຳເຄື່ອງທັນຍະບູຊາມາຖວາຍ. ເຮົາຄວນຈະຍິນດີໃນສິ່ງເຫລົ່ານີ້ບໍ່?
[7]ພວກເຈົ້າໄດ້ຈັດຕຽມບ່ອນນອນຂອງພວກເຈົ້າໄວ້ຢູ່ເທິງພູສູງ; ແລະພວກເຈົ້າກໍ່ຂຶ້ນໄປບ່ອນນັ້ນເພື່ອຖວາຍເຄື່ອງບູຊາທັງຫລາຍດ້ວຍ.
[8]ພວກເຈົ້າໄດ້ຕັ້ງສັນຍາລັກຂອງພວກເຈົ້າໄວ້ຢູ່ຂ້າງຫລັງປະຕູແລະເສົາປະຕູເຫລົ່ານັ້ນ; ພວກເຈົ້າໄດ້ປະຖິ້ມເຮົາ, ເຮັດໃຫ້ຕົວເອງເປືອຍກາຍ,
ແລະຂຶ້ນໄປ; ພວກເຈົ້າໄດ້ເຮັດໃຫ້ບ່ອນນອນຂອງພວກເຈົ້າກວ້າງຂຶ້ນ. ພວກເຈົ້າໄດ້ເຮັດພັນທະສັນຍາກັບພວກເຂົາ;
ພວກເຈົ້າຮັກບ່ອນນອນຂອງພວກເຂົາ; ພວກເຈົ້າໄດ້ເຫັນສ່ວນທີ່ເປັນສ່ວນຕົວຂອງພວກເຂົາ.
[9]ພວກເຈົ້າໄດ້ຂຶ້ນໄປຫາພະໂມເລັກພ້ອມກັບນ້ຳມັນຫອມ; ພວກເຈົ້າໄດ້ເຮັດໃຫ້ນ້ຳຫອມທະວີຫລາຍຂຶ້ນ.
ພວກເຈົ້າໄດ້ສົ່ງທູດຂອງພວກເຈົ້າໄປແດນໄກ; ພວກເຈົ້າໄດ້ລົງໄປຍັງແດນຄົນຕາຍ.[10]ພວກເຈົ້າໄດ້ອິດເມື່ອຍຈາກການເດີນທາງອັນຍາວໄກ,
ແຕ່ພວກເຈົ້າກໍບໍ່ເຄີຍເວົ້າວ່າ "ມັນບໍ່ມີຄວາມຫວັງ." ພວກເຈົ້າໄດ້ພົບເຫັນຊີວິດຢູ່ໃນມືຂອງພວກເຈົ້າ; ສະນັ້ນພວກເຈົ້າຈຶ່ງບໍ່ອ່ອນແອລົງ.
[11]"ພວກເຈົ້າກຳລັງກັງທຸກຮ້ອນເຖິງຜູ້ໃດ? ພວກເຈົ້າຢ້ານໃຜຫລາຍຈົນເຮັດໃຫ້ພວກເຈົ້າກະທຳການຢ່າງຫລອກລວງ,
ຫລາຍຈົນພວກເຈົ້າບໍ່ລະນຶກເຖິງເຮົາຫລືຄິດເຖິງເຮົາບໍ່? ເພາະວ່າເຮົາໄດ້ມິດງຽບມານານ, ພວກເຈົ້າຈຶ່ງບໍ່ຢ້ານກົວເຮົາອີກຕໍ່ໄປ.
[12]ເຮົາຈະປະກາດທຸກການກະທຳທີ່ຊອບທຳຂອງພວກເຈົ້າ ແລະ ບອກເຖິງທຸກສິ່ງທີ່ພວກເຈົ້າໄດ້ເຮັດ, ແຕ່ສິ່ງເຫລົ່ານັ້ນຈະບໍ່ຊ່ວຍພວກເຈົ້າ.
[13]ໃນເວລາທີ່ພວກເຈົ້າຮ້ອງຂໍ, ກໍໃຫ້ບັນດາຮູບເຄົາລົບຂອງພວກເຈົ້າທີ່ສະສົມໄວ້ຊ່ວຍກູ້ພວກເຈົ້າ. ແຕ່ລົມຈະພັດພາພວກມັນໄປຫມົດ,
ລົມຫາຍໃຈດຽວກໍຈະຫອບພວກມັນໄປຫມົດ. ແຕ່ເຂົາຜູ້ທີ່ລີ້ໄພໃນເຮົາ, ຈະໄດ້ຮັບແຜ່ນດິນເປັນມໍລະດົກ ແລະ
ໄດ້ກຳມະສິດໃນພູເຂົາບໍລິສຸດຂອງເຮົາ.
[14]ເຂົາຈະເວົ້າວ່າ,“ ຈົ່ງສ້າງຂຶ້ນ, ສ້າງຂຶ້ນເຖີດ! ຈົ່ງເປີດທາງ! ຈົ່ງເອົາກ້ອນຫີນທີ່ເຮັດໃຫ້ສະດຸດອອກໄປຈາກເສັ້ນທາງຂອງຊົນຊາດຂອງເຮົາ!
'[15]ເພາະວ່ານີ້ຄືອົງຜູ້ສູງເດັ່ນແລະສູງສົ່ງ, ຜູ້ຊົງດຳລົງຢູ່ນິລັນດອນ, ພຣະນາມຂອງພຣະອົງຄືບໍລິສຸດ, ຜູ້ທີ່ກ່າວວ່າ
"ເຮົາດຳລົງຢູ່ໃນທີ່ສູງສົ່ງແລະບໍລິສຸດ, ຢູ່ກັບຜູ້ທີ່ມີວິນຍານທີ່ບອບຊ້ຳແລະຖ່ອມໃຈ, ເພື່ອຟື້ນຟູວິນຍານຂອງພວກຄົນທີ່ຖ່ອມໃຈ,
ແລະເພື່ອຟື້ນຟູຈິດໃຈຂອງຜູ້ທີ່ສຳນຶກຜິດ.
[16]ເພາະເຮົາຈະບໍ່ກ່າວໂທດຢູ່ຕະຫລອດໄປ, ແລະເຮົາຈະບໍ່ມີຄວາມໂກດຮ້າຍຕະຫລອດໄປ,
ເພາະວ່າຈິດວິນຍານຂອງມະນຸດຈະອ່ອນກຳລັງຕໍ່ຫນ້າເຮົາ, ຄືຊີວິດທັງຫລາຍທີ່ເຮົາໄດ້ສ້າງຂຶ້ນມາ.
[17]ຍ້ອນຄວາມຜິດບາບຈາກຄວາມຮຸນແຮງຂອງເຂົາເພີ່ມຫລາຍຂຶ້ນ, ແລະເຮົາໄດ້ລົງໂທດເຂົາ; ເຮົາໄດ້ເຊື່ອງໃບຫນ້າ ຂອງເຮົາແລະໂກດຮ້າຍ,
ແຕ່ເມື່ອເຂົາກັບມາຍັງທາງແຫ່ງໃຈຂອງເຂົາແລ້ວ.
[18]ເຮົາໄດ້ເຫັນທາງຂອງເຂົາແລ້ວ, ແຕ່ເຮົາຈະຮັກສາເຂົາໃຫ້ຫາຍດີ.
ເຮົາຈະນຳເຂົາແລະເລົ້າໂລມແລະຫນູນໃຈຜູ້ຄົນທີ່ໂສກເສົ້າເສຍໃຈເຖິງເຂົາ,[19]ແລະເຮົາໄດ້ສ້າງຜົນຈາກຮິມສົບປາກ. ສັນຕິສຸກ, ສັນຕິສຸກ,
ແກ່ຄົນທັງຫລາຍທີ່ຢູ່ໄກ ແລະ ແກ່ຄົນທັງຫລາຍທີ່ຢູ່ໃກ້ ພຣະຢາເວກ່າວວ່າ, ເຮົາຈະຮັກສາພວກເຂົາໃຫ້ຫາຍດີ.
[20]ແຕ່ຄົນອະທຳຄືກັນກັບທະເລທີ່ປັ່ນປ່ວນບໍ່ສາມາດນິ່ງສະຫງົບໄດ້, ແລະນ້ຳທະເລນັ້ນກໍເຮັດໃຫ້ມີຕົມແລະຂີ້ຕົມໄຫລຂຶ້ນມາ.
[21]ບໍ່ມີສັນຕິສຸກສຳລັບຄົນອະທຳ. ພຣະຢາເວກ່າວດັ່ງນີ້."


generated on Tue Jun 17 19:01:42 2025

58 [1]"ຈົ່ງຮ້ອງດັງໆ; ຢ່າຈົ່ງສຽງໄວ້, ຈົ່ງເປັ່ງສຽງຂອງເຈົ້າໃຫ້ດັ່ງຄືກັບສຽງແກ,
ຈົ່ງປະເຊີນໜ້າປະຊາຊົນຂອງເຮົາພ້ອມກັບການທໍລະຍົດຂອງພວກເຂົາ, ແລະ ເຊື້ອສາຍຂອງຢາໂຄບພ້ອມກັບຄວາມບາບຂອງພວກເຂົາ.
[2]ແຕ່ພວກເຂົາກໍຍັງສະແຫວງຫາເຮົາທຸກໆວັນແລະຊື່ນຊົມຍິນດີໃນຄວາມຮູ້ກ່ຽວກັບທາງຂອງເຮົາ,
ຄືກັບປະຊາຊາດຫນຶ່ງທີ່ປະຕິບັດຄວາມຊອບທຳແລະບໍ່ປະຖິ້ມກົດບັນຍັດຂອງພຣະເຈົ້າຂອງພວກເຂົາ. ພວກເຂົາຂໍໃຫ້ເຮົາຕັດສິນທີ່ຊອບທຳ;
ພວກເຂົາຍິນດີໃນຄວາມຄິດກ່ຽວກັບພຣະເຈົ້າທີ່ສະເດັດເຂົ້າມາໃກ້.

[3]ພວກເຂົາເວົ້າວ່າ 'ເປັນຫຍັງພວກເຮົາໄດ້ອົດອາຫານ, ແຕ່ພຣະອົງບໍ່ຊົງເບິ່ງ? ເປັນຫຍັງພວກເຮົາໄດ້ຖ່ອມຕົວລົງ, ແຕ່ວ່າພຣະອົງບໍ່ສົນພຣະໄທ?
' ຈົ່ງເບິ່ງ, ໃນມື້ທີ່ພວກເຈົ້າຖືສິນອົດອາຫານ, ພວກເຈົ້າກໍເຮັດຕາມໃຈຂອງເຈົ້າເອງແລະກົດຂີ່ຂົ່ມເຫັງຄົນງານທັງຫມົດຂອງພວກເຈົ້າ.
[4]ເບິ່ງແມ, ການອົດອາຫານຂອງພວກເຈົ້າກໍພຽງເພື່ອໂຕ້ຖຽງກັນ, ແລະຕໍ່ສູ້ຊຶ່ງກັນແລະກັນ;
ພວກເຈົ້າບໍ່ໄດ້ອົດອາຫານໃນມື້ນີ້ເພື່ອເຮັດໃຫ້ສຽງຂອງພວກເຈົ້າໄດ້ຍິນໄປເຖິງເບື້ອງເທິງ. [5]ນີ້ຄືການອົດອາຫານແບບທີ່ເຮົາຕ້ອງການຄື:
ມື້ເພື່ອໃຫ້ຄົນຖ່ອມຕົວລົງ, ເພື່ອໃຫ້ເຂົາກົ້ມຫົວລົງຄືກັບຕົ້ນອໍ້ແລະປູຜ້າກະສອບແລະຂີ້ເຖົ່າຢູ່ພາຍໃຕ້ຕົວເຂົາເອງແທ້ບໍ?
ພວກເຈົ້າເອີ້ນການກະທຳເຊັ່ນນີ້ວ່ານີ້ແມ່ນການອົດອາຫານ, ແລະເປັນມື້ທີ່ພຣະຢາເວຊົງພໍພຣະໄທແທ້ບໍ?
[6]ເຮົາເລືອກການອົດອາຫານຢ່າງນີ້: ຄືການປົດປ່ອຍຄວາມຜູກພັນທີ່ອະທຳ, ການແກ້ສາຍເຊືອກຂອງແອກອອກໄປ,
ການປົດປ່ອຍຄົນທີ່ຊອກຊ້ຳລະກຳໃຈໃຫ້ເປັນອິດສະລະ, ແລະຫັກແອກທັງຫມົດເສຍບໍ່ແມ່ນບໍ?
[7]ການອົດອາຫານທີ່ເປັນການຫັກເຂົ້າຈີ່ຂອງພວກເຈົ້າໃຫ້ກັບຄົນທີ່ຫິວໂຫຍແລະນຳເອົາຄົນຍາກຈົນແລະບໍ່ມີທີ່ຢູ່ອາໄສເຂົ້າໄປໃນເຮືອນຂອງພວກເຈົ້າບໍ່ແມ່ນບໍ?"
ເມື່ອພວກເຈົ້າເຫັນຄົນທີ່ເປືອຍກາຍ, ພວກເຈົ້າຄວນຈະນຸ່ງເສື້ອຜ້າໃຫ້ເຂົາ,
ແລະພວກເຈົ້າບໍ່ຄວນເຊື່ອງຕົວພວກເຈົ້າຈາກຍາດພີ່ນ້ອງຂອງພວກເຈົ້າເອງ.
[8]ເມື່ອນັ້ນແສງສະຫວ່າງຂອງເຈົ້າພຸ້ງອອກມາຄືກັບດວງຕາເວັນຂຶ້ນ, ແລະການປົວຢາຮັກສາຂອງພວກເຈົ້າຈະເກີດຂຶ້ນຢ່າງໄວວາ;
ຄວາມຊອບທຳຂອງພວກເຈົ້າຈະຢູ່ຕໍ່ຫນ້າພວກເຈົ້າ, ແລະພຣະສີລິຂອງພຣະຢາເວຈະເປັນຜູ້ປົກປ້ອງເຈົ້າ.
[9]ແລ້ວພວກເຈົ້າຈະຮ້ອງຂໍ, ແລະພຣະຢາເວຈະຊົງຕອບ; ພວກເຈົ້າຈະຮ້ອງຂໍຄວາມຊ່ວຍເຫລືອ, ແລະພຣະອົງຈະເວົ້າຕອບວ່າ, "ເຮົາຢູ່ທີ່ນີ້."
ຖ້າພວກເຈົ້າເອົາແອກອອກໄປຈາກທ່າມກາງພວກເຈົ້າ, ອີກທັງນິ້ວມືທີ່ກ່າວຮ້າຍ, ແລະຄຳເວົ້າອະທຳອອກໄປ,
[10]ຖ້າພວກເຈົ້າເອງໄດ້ຈັດຫາໃຫ້ຄົນທີ່ອຶດຫິວແລະຄົນຂັດສົນທີ່ທຸກໃຈໃຫ້ອີ່ມ; ຈາກນັ້ນແສງສະຫວ່າງຂອງພວກເຈົ້າຈະຮຸ່ງແຈ້ງໃນຄວາມມືດ,
ແລະຄວາມມືດຂອງພວກເຈົ້າຈະເປັນຄືກັບຕອນກາງເວັນ.
[11]ແລ້ວພຣະຢາເວຈະຊົງນຳພາພວກເຈົ້າເລື້ອຍໄປແລະເຮັດໃຫ້ພວກເຈົ້າອີ່ມຫນຳໃນເຂດແດນທີ່ຊຶ່ງບໍ່ມີນ້ຳ,
ແລະພຣະອົງຈະເສີມກະດູກຂອງພວກເຈົ້າໃຫ້ແຂງແຮງ. ພວກເຈົ້າຈະເປັນຄືກັບສວນທີ່ມີນ້ຳຫົດ,
ແລະເຫມືອນກັບນ້ຳພຸທີ່ໄຫລບໍ່ເຄີຍຂາດສາຍ.
[12]ບາງຄົນໃນພວກເຈົ້າຈະສ້າງສິ່ງປະຫລັກຫັກພັງບູຮານຂຶ້ນມາໃຫມ່; ພວກເຈົ້າຈະເຮັດໃຫ້ຊາກຫັກພັງຂອງຫລາຍຊົ່ວອາຍຸຄົນຟື້ນຄືນມາໃຫມ່;
ພວກເຈົ້າຈະຖືກເອີ້ນວ່າ "ຜູ້ສ້ອມແປງກຳແພງ," "ຜູ້ຟື້ນຟູຖະຫນົນທີ່ຈະດຳລົງຊີວິດຕໍ່ໄປ."
[13]ສົມມຸດວ່າພວກເຈົ້າຫັນຕີນຂອງພວກເຈົ້າຈາກການເດີນທາງໃນວັນສະບາໂຕ,
ແລະຫັນຈາກການເຮັດຕາມໃຈຂອງພວກເຈົ້າເອງໃນວັນບໍລິສຸດຂອງເຮົາ. ສົມມຸດວ່າພວກເຈົ້າເອີ້ນວັນສະບາໂຕເປັນວັນປິຕິຍິນດີ,
ແລະພວກເຈົ້າເອີ້ນເລື່ອງທີ່ກ່ຽວກັບພຣະຢາເວວ່າບໍລິສຸດແລະມີກຽດ.
ສົມມຸດວ່າພວກເຈົ້າໃຫ້ກຽດແກ່ວັນສະບາໂຕໂດຍການປະຈາກວຽກງານຂອງພວກເຈົ້າເອງ,
ແລະໂດຍການບໍ່ຊອກຫາຄວາມສຸກຂອງຕົວເອງແລະໂດຍບໍ່ເວົ້າຖ້ອຍຄຳຂອງພວກເຈົ້າເອງ.
[14]"ແລ້ວພວກເຈົ້າຈະໄດ້ຮັບຄວາມຊື່ນຊົມຍິນດີໃນພຣະຢາເວ; ແລະເຮົາຈະເຮັດໃຫ້ພວກເຈົ້າໄດ້ຂີ່ນໄປໃນທີ່ສູງຂອງແຜ່ນດິນໂລກ;
ເຮົາຈະລ້ຽງເຈົ້າຈາກມໍລະດົກຂອງຢາໂຄບບັນພະບູລຸດຂອງເຈົ້າ - ເພາະວ່າ ພຣະໂອດຂອງພຣະຢາເວໄດ້ກ່າວແລ້ວ.

59 [1]ຈົ່ງເບິ່ງ, ພຣະຫັດຂອງພຣະຢາເວບໍ່ໄດ້ສັ້ນເກີນກວ່າທີ່ຈະຊ່ວຍໃຫ້ເຈົ້າລອດບໍ່ໄດ້; ຫລືຫູຂອງພຣະອົງກໍບໍ່ໄດ້ຕຶງເກີນກວ່າທີ່ຈະບໍ່ໄດ້ຍິນ.
[2]ແຕ່ການກະທຳທີ່ຜິດບາບຂອງພວກເຈົ້າໄດ້ແຍກພວກເຈົ້າຈາກພຣະເຈົ້າຂອງເຈົ້າ,
ແລະຄວາມບາບທັງຫລາຍຂອງພວກເຈົ້າໄດ້ເຮັດໃຫ້ພຣະອົງປິດບັງພຣະພັກພຣະອົງຈາກພວກເຈົ້າແລະຈາກການໄດ້ຍິນພວກເຈົ້າ.

[3]ເພາະມືຂອງພວກເຈົ້າເປື້ອນດ້ວຍເລືອດແລະນິ້ວມືຂອງພວກເຈົ້າເປື້ອນດ້ວຍບາບ. ປາກຂອງພວກເຈົ້າເວົ້າຕົວະ ແລະ
ລີ້ນຂອງພວກເຈົ້າເວົ້າກ່າວຮ້າຍ.[4]ບໍ່ມີຜູ້ໃດຮຽກຮ້ອງດ້ວຍຄວາມຊອບທຳແລະບໍ່ມີຜູ້ໃດສູ້ຄະດີຂອງເຂົາດ້ວຍຄວາມຈິງ.
ພວກເຂົາໄວ້ວາງໃຈໃນຖ້ອຍຄຳທີ່ໄຮ້ສາລະ, ແລະ ເວົ້າຕົວະ; ພວກເຂົາຕັ້ງທ້ອງດ້ວຍຄວາມລຳບາກແລະເກີດຄວາມບາບອອກມາ.
[5]ພວກເຂົາຟັກໄຂ່ຂອງງູພິດແລະຖັກແສ່ວໃຍຂອງແມງມຸມ. ໃຜກໍຕາມທີ່ກິນໄຂ່ຂອງພວກເຂົາກໍຈະຕາຍ,
ແລະຖ້າໄຂ່ຖືກເຮັດໃຫ້ແຕກມັນຈະອອກມາເປັນງູພິດ.
[6]ໃຍຂອງພວກເຂົາບໍ່ສາມາດໃຊ້ເຮັດເປັນເຄື່ອງນຸ່ງບໍ່ໄດ້ອີກທັງພວກເຂົາບໍ່ສາມາດຫົ່ມໂຕເອງດ້ວຍຜົນງານຂອງພວກເຂົາໄດ້.
ຜົນງານຂອງພວກເຂົາແມ່ນຜົນງານຂອງຄວາມບາບ, ແລະການກະທຳຂອງຄວາມຮຸນແຮງແມ່ນຢູ່ໃນມືຂອງພວກເຂົາ.
[7]ຕີນຂອງພວກເຂົາແລ່ນໄປຫາຄວາມຊົ່ວ,
ແລະພວກເຂົາກໍແລ່ນໄປເຮັດໃຫ້ຄົນບໍ່ມີຄວາມຜິດຫລັ່ງເລືອດຄວາມຄິດຂອງພວກເຂົາແມ່ນຄວາມຄິດຂອງບາບ;
ຄວາມຮຸນແຮງແລະການທຳລາຍແມ່ນຫົນທາງຂອງພວກເຂົາ.[8]ພວກເຂົາບໍ່ຮູ້ເສັ້ນທາງແຫ່ງສັນຕິສຸກ,
ແລະບໍ່ມີຄວາມຍຸດຕິທຳໃນເສັ້ນທາງຂອງພວກເຂົາ. ພວກເຂົາໄດ້ເຮັດໃຫ້ເສັ້ນທາງຄົດລ້ຽວ;
ໃຜກໍຕາມທີ່ເດີນໄປຕາມເສັ້ນທາງເຫລົ່ານີ້ກໍບໍ່ຮູ້ຈັກສັນຕິສຸກ.
[9]ສະນັ້ນຄວາມຍຸດຕິທຳຈຶ່ງຢູ່ຫ່າງໄກຈາກພວກເຮົາ, ອີກທັງຄວາມຊອບທຳກໍບໍ່ມາເຖິງພວກເຮົາ. ພວກເຮົາລໍຄອຍຄວາມສະຫວ່າງ,
ແຕ່ເຫັນຄວາມມືດ; ພວກເຮົາຊອກຫາຄວາມສະຫວ່າງ, ແຕ່ພວກເຮົາຍ່າງໃນຄວາມມືດ.[10]ພວກເຮົາຊອກຫາກຳແພງເຫມືອນຄົນຕາບອດ
ເຫມືອນກັບພວກຄົນທີ່ເບິ່ງບໍ່ເຫັນ. ພວກເຮົາສະດຸດລົ້ມລົງໃນຕອນກາງເວັນຄືກັນກັບເປັນຕອນຄ່ຳ,
ພວກເຮົາເປັນເຫມືອນກັບຄົນຕາຍໃນທ່າມກາງບັນດາຄົນທີ່ແຂງແຮງ.
[11]ພວກເຮົາຮ້ອງຄາງເຫມືອນຫມີແລະຄວນຄາງເຫມືອນນົກພິລາບ; ພວກເຮົາລໍຄອຍຄວາມຍຸດຕິທຳ, ແຕ່ບໍ່ມີເລີຍ;
ພວກເຮົາລໍຄອຍຄວາມຊ່ວຍເຫລືອ, ແຕ່ມັນຢູ່ໄກຈາກພວກເຮົາ.
[12]ເພາະການທໍລະຍົດຫລາຍຢ່າງຂອງພວກເຮົາແມ່ນຢູ່ຕໍ່ພຣະພັກພຣະອົງ, ແລະຄວາມບາບຂອງພວກເຮົາກໍປັກປຳຕໍ່ພວກເຮົາ;
ເພາະການທໍລະຍົດຂອງພວກເຮົາຢູ່ກັບພວກເຮົາ, ແລະພວກເຮົາຮູ້ຈັກຄວາມບາບຂອງພວກເຮົາດີ.[13]ພວກເຮົາໄດ້ທໍລະຍົດ,
ດ້ວຍການປະຕິເສດພຣະຢາເວແລະຫັນຫນີຈາກການຕິດຕາມພຣະເຈົ້າຂອງພວກເຮົາ. ພວກເຮົາໄດ້ເວົ້າເຖິງການກົດຂີ່ແລະເຮັດໃຫ້ຫັນເຫໄປ,
ການຈົ່ມວ່າທີ່ເກີດມາຈາກໃຈແລະຖ້ອຍຄຳທີ່ເວົ້າຕົວະ.
[14]ຄວາມຍຸດຕິທຳໄດ້ຖືກບັງຄັບເອົາໄປ, ແລະຄວາມຊອບທຳຢືນຢູ່ຫ່າງໄກ; ເພາະຄວາມຈິງໄດ້ລົ້ມລົງຢູ່ໃນກາງເມືອງ,
ແລະຄວາມທ່ຽງທຳກໍເຂົ້າມາບໍ່ໄດ້.[15]ຄວາມສັດຈິງໄດ້ຫາຍໄປ, ແລະຜູ້ທີ່ຫັນຫນີໄປຈາກຄວາມຊົ່ວຮ້າຍກໍເຮັດໃຫ້ຕົວເອງຕົກເປັນເຫຍື່ອ.
ພຣະຢາເວໄດ້ເຫັນມັນແລະຊົງບໍ່ພໍພຣະໄທທີ່ບໍ່ມີຄວາມຍຸດຕິທຳ.
[16]ພຣະອົງຊົງເຫັນວ່າບໍ່ມີຜູ້ໃດເລີຍ, ແລະປະຫລາດໃຈວ່າບໍ່ມີໃຜທີ່ຈະອອນວອນພື່ອ.
ເພາະສະນັ້ນແຂນຂອງພຣະອົງເອງຈຶ່ງນຳເອົາຄວາມລອດມາໃຫ້ພຣະອົງ, ແລະຄວາມຊອບທຳຂອງພຣະອົງໄດ້ເຊີດຊູພຣະອົງໄວ້.
[17]ພຣະອົງໄດ້ສວມໃສ່ຄວາມຊອບທຳເປັນເກາະປ້ອງກັນເອິກແລະສວມຫມວກເຫລັກແຫ່ງຄວາມລອດໄວ້ເທິງຫົວຂອງພຣະອົງ.
ພຣະອົງຊົງນຸ່ງເຄື່ອງນຸ່ງຂອງການແກ້ແຄ້ນແລະສວມໃສ່ເສື້ອຄຸມຄວາມກະຕືລືລົ້ນ.
[18]ພຣະອົງຊົງຕອບແທນພວກເຂົາຕາມສິ່ງທີ່ພວກເຂົາໄດ້ກະທຳ, ຄືການພິພາກສາດ້ວຍພຣະພິໂລດຕໍ່ພວກສັດຕູຂອງພຣະອົງ,
ແລະການແກ້ແຄ້ນຕໍ່ສັດຕູຂອງພຣະອົງ, ແລະການລົງໂທດຕໍ່ຫມູ່ເກາະຕ່າງໆເປັນການຕອບແທນພວກເຂົາ.
[19]ເພາະສະນັ້ນພວກເຂົາຈະຢ້ານກົວພຣະນາມຂອງອົງພຣະຢາເວຈາກທິດຕາເວັນຕົກ,
ແລະຢ້ານກົວພຣະສະຫງ່າຣາສີຂອງພຣະອົງຈາກທາງຕາເວັນຂຶ້ນ; ເພາະວ່າພຣະອົງຈະສະເດັດມາຄືກັບກະແສນ້ຳໄຫລແຮງ,
ໂດຍລົມຫາຍໃຈຂອງພຣະຢາເວ.[20]"
ພຣະຜູ້ໄຖ່ຈະສະເດັດມາຍັງຊີໂອນແລະມາຫາຜູ້ທີ່ຫັນກັບຈາກການກະທຳທີ່ທໍລະຍົດຂອງພວກເຂົາໃນຢາໂຄບ -
ນີ້ແມ່ນຄຳປະກາດຂອງພຣະຢາເວ.
[21]ສ່ວນເຮົາເອງ, ນີ້ແມ່ນພັນທະສັນຍາຂອງເຮົາກັບພວກເຂົາ -ພຣະຢາເວກ່າວວ່າ, ຈິດວິນຍານຂອງເຮົາຜູ້ຊຶ່ງຢູ່ເຫນືອພວກເຈົ້າ,
ແລະຖ້ອຍຄຳຂອງເຮົາທີ່ເຮົາໄດ້ໃສ່ໄວ້ໃນປາກຂອງພວກເຈົ້າຈະບໍ່ພາກອອກຈາກປາກຂອງພວກເຈົ້າຫລືຈະບໍ່ພາກອອກຈາກປາກຂອງບຸດທັງຫລາຍຂອງພວກເຈົ້າ,
ຫລືຈະບໍ່ພາກອອກຈາກປາກຂອງລູກຫລານທັງຫລາຍຂອງພວກເຈົ້າ - ພຣະຢາເວກ່າວວ່າ - ຕັ້ງແຕ່ບັດນີ້ໄປແລະຕະຫລອດໄປເປັນນິດ."

60 [1]ຈົ່ງລຸກຂຶ້ນ, ສ່ອງແສງ; ເພາະແສງສະຫວ່າງຂອງເຈົ້າໄດ້ມາແລ້ວ, ແລະພຣະສະຫງ່າຣາສີຂອງພຣະຢາເວໄດ້ຂຶ້ນມາເຫນືອເຈົ້າແລ້ວ.

[2]ເຖິງແມ່ນວ່າຄວາມມືດຈະປົກຄຸມທົ່ວແຜ່ນດິນໂລກ, ແລະຄວາມມືດຈະປົກຄຸມບັນດາປະຊາຊາດ; ແຕ່ພຣະຢາເວຈະຊົງຂຶ້ນມາເຫນືອເຈົ້າ,
ແລະຈະເຫັນພຣະສະຫງ່າຣາສີຂອງພຣະອົງເຫນືອເຈົ້າ. [3]ບັນດາປະຊາຊາດຈະມາຍັງແສງສະຫວ່າງຂອງເຈົ້າ,
ແລະບັນດາກະສັດທັງຫລາຍຈະມາຍັງຄວາມສະຫວ່າງສຸກໃສຂອງເຈົ້າທີ່ກຳລັງຂຶ້ນມາ.
[4]ຈົ່ງເບິ່ງໄປອ້ອມຮອບເຖີດ. ພວກເຂົາທຸກຄົນໄດ້ລວມຕົວກັນແລະມາຫາເຈົ້າ. ພວກລູກຊາຍຂອງເຈົ້າຈະມາຈາກແດນໄກ,
ແລະພວກເຂົາຈະອູ້ມລູກສາວຂອງເຈົ້າໄວ້ໃນອ້ອມແຂນຂອງພວກເຂົາ. [5]ເມື່ອນັ້ນເຈົ້າຈະຫລຽວເບິ່ງແລະເຕັມໄປດ້ວຍຄວາມສຸກໃຈ,
ແລະຫົວໃຈຂອງເຈົ້າຈະມີຄວາມປິຕິຍິນດີ, ເພາະວ່າຄວາມມັ່ງຄັ່ງຂອງທະເລຈະຖືກຖອກເທອອກມາໃຫ້ເຈົ້າ,
ຊັບສົມບັດຂອງບັນດາປະຊາຊາດຈະມາຍັງເຈົ້າ.
[6]ຂະບວນລົດອູດຈະຫຸ້ມລ້ອມເຈົ້າ, ຄືພວກອູດຈາກມີດີອານ ແລະ ເອຟາ; ພວກເຂົາທັງຫມົດຈະມາຈາກເຊບາ;
ພວກເຂົາຈະນຳເອົາທອງຄຳແລະກຳຍານມາ, ແລະຮ້ອງເພງສັນລະເສີນພຣະຜູ້ເປັນເຈົ້າ. [7]ຝູງແກະ
ທັງຫມົດຂອງເກດາຈະຖືກເຕົ້າໂຮມມາຍັງພວກເຈົ້າ, ບັນດາແກະໂຕຜູ້ຂອງເນບາໂຢດຈະຮັບໃຊ້ຕາມຄວາມຕ້ອງການຂອງເຈົ້າ;
ພວກມັນຈະເປັນເຄື່ອງບູຊາທີ່ຫນ້າພໍໃຈຢູ່ເທິງແທ່ນບູຊາຂອງເຮົາ; ແລະເຮົາໃຫ້ຈະພຣະວິຫານທີ່ສະຫງ່າງາມຂອງເຮົາໄດ້ຮັບກຽດ.
[8]ຄົນເຫລົ່ານີ້ແມ່ນໃຜທີ່ບິນມາເຫມືອນເມກ, ແລະເຫມືອນນົກພິລາບທີ່ກັບມາຍັງທີ່ພັກອາໄສຂອງພວກມັນ?
[9]ບັນດາແຜ່ນດິນແຄມທະເລຫລຽວຫາເຮົາແລະເຮືອທັງຫລາຍຂອງເມືອງທາຊາກໍນຳຫນ້າ,
ເພື່ອນຳເອົາລູກຊາຍທັງຫລາຍຂອງເຈົ້າຈາກແດນໄກ, ເງິນແລະທອງຄຳຂອງພວກເຂົາມາພ້ອມກັບພວກເຂົາດ້ວຍ,
ເພາະພຣະນາມຂອງພຣະຢາເວາພຣະເຈົ້າຂອງເຈົ້າ, ແລະສຳລັບອົງບໍລິສຸດຂອງອິດສະຣາເອນ,
ເພາະວ່າພຣະອົງໄດ້ເຮັດໃຫ້ພວກເຈົ້າໄດ້ຮັບກຽດ.
[10]ພວກບຸດຊາຍຂອງຄົນຕ່າງຊາດຈະສ້າງກຳແພງຂອງເຈົ້າຄືນໃຫມ່, ແລະບັນດາກະສັດຂອງພວກເຂົາຈະຮັບໃຊ້ເຈົ້າ;
ເຖິງແມ່ນວ່າເຮົາໄດ້ລົງໂທດເຈົ້າເພາະຄວາມໂກດແຄ້ນຂອງເຮົາ, ແຕ່ວ່າເຮົາຈະມີຄວາມເມດຕາກາລຸນາຕໍ່ເຈົ້າດ້ວຍຄວາມໂປດປານຂອງເຮົາ.
[11]ປະຕູເມືອງທັງຫລາຍຂອງເຈົ້າຍັງຈະເປີດຢູ່ຕະຫລອດເວລາ; ປະຕູເຫລົ່ານັ້ນຈະບໍ່ຖືກປິດທັງກາງເວັນຫລືກາງຄືນ,
ເພື່ອໃຫ້ກະສັດທັງຫລາຍໄດ້ນຳຄວາມອຸດົມສົມບູນຂອງບັນດາປະຊາຊາດເຂົ້າມາ.
[12]ແທ້ຈິງແລ້ວ, ບັນດາປະຊາຊາດແລະຣາຊອານາຈັກທີ່ບໍ່ຮັບໃຊ້ເຈົ້າຈະພິນາດໄປ; ປະຊາຊາດເຫລົ່ານັ້ນຈະຖືກທຳລາຍຫມົດສິ້ນ.
[13]ສະຫງ່າຣາສີຂອງເລບານອນຈະມາຍັງເຈົ້າ, ລວມທັງຕົ້ນສົນສາມໃບ, ຕົ້ນສົນສີດາຕົ້ນໄມ້ແປກ,
ເພື່ອເຮັດໃຫ້ສະຖານທີ່ນະມັດສະການຂອງເຮົາສວຍງາມ; ແລະເຮົາຈະເຮັດໃຫ້ສະຖານທີ່ວາງຕີນຂອງເຮົາໄດ້ຮັບກຽດ.
[14]ພວກເຂົາຈະມາຫາເຈົ້າແລະກົ້ມຂາບລົງ ພວກລູກຊາຍທັງຫລາຍຂອງຄົນເຫລົ່ານັ້ນຈະໂນມໂຕລົງຄຳນັບເຈົ້າ;
ພວກເຂົາຈະກົ້ມຂາບລົງທີ່ຕີນຂອງເຈົ້າ; ພວກເຂົາຈະເອີ້ນເຈົ້າວ່າເມືອງແຫ່ງພຣະຢາເວ, ຊີໂອນແຫ່ງອົງບໍລິສຸດຂອງອິດສະຣາເອນ.
[15]ແທນການທີ່ເຈົ້າຍັງຄົງຖືກປະຖິ້ມແລະຖືກກຽດຊັງ, ໂດຍບໍ່ມີໃຜຜ່ານເຂົ້າມາຍັງເຈົ້າ,
ເຮົາຈະເຮັດໃຫ້ເຈົ້າເປັນສິ່ງທີ່ຫນ້າພູມໃຈຕະຫລອດໄປເປັນນິດ, ເປັນຄວາມຊື່ນບານຈາກຄົນລຸ້ນຫນຶ່ງຫາຄົນລຸ້ນຫນຶ່ງ.
[16]ເຈົ້າຈະດື່ມນົມຂອງບັນດາປະຊາຊາດ, ແລະຈະໄດ້ຮັບການລ້ຽງດູທີ່ເອິກຂອງກະສັດທັງຫລາຍ;
ເຈົ້າຈະຮູ້ວ່າເຮົາຄືພຣະຢາເວເປັນພຣະຜູ້ຊ່ອຍໃຫ້ລອດ ແລະ ພຣະຜູ້ໄຖ່ຂອງເຈົ້າ, ອົງຜູ້ຍິ່ງໃຫຍ່ຂອງຢາໂຄບ.
[17]ເຮົາຈະນຳເອົາຄຳມາແທນທອງສຳຣິດ, ເຮົາຈະນຳເອົາເງິນມາແທນເຫລັກ; ຈະນຳທອງສຳຣິດມາແທນໄມ້, ຈຳນຳເຫລັກມາແທນກ້ອນຫີນ.
ເຮົາຈະແຕ່ງຕັ້ງຄວາມສະຫງົບສຸກໃຫ້ເປັນເຈົ້າເມືອງຂອງເຈົ້າ, ແລະຄວາມຍຸດຕິທຳເປັນພວກຜູ້ປົກຄອງຂອງເຈົ້າ. [18]ຈະບໍ່ໄດ້ຍິນເຖິງ
ຄວາມທາລຸນໃນແຜ່ນດິນຂອງເຈົ້າອີກຕໍ່ໄປ, ແລະບໍ່ໄດ້ຍິນເຖິງການລ້າງຜານ, ຫລືການເຮັດໃຫ້ກະຈັດກະຈາຍໄປພາຍໃນເຂດແດນຂອງເຈົ້າ;
ແຕ່ເຈົ້າຈະເອີ້ນກຳແພງຂອງເຈົ້າວ່າຄວາມລອດ, ແລະເອີ້ນປະຕູເມືອງຂອງເຈົ້າວ່າການສັນລະເສີນ.
[19]ດວງຕາເວັນຈະບໍ່ເປັນແສງສະຫວ່າງຂອງເຈົ້າໃນຕອນກາງເວັນອີກຕໍ່ໄປ, ອີກທັງດວງເດືອນຈະບໍ່ເປັນຄວາມສະຫວ່າງສຸກໃສແກ່ເຈົ້າອີກຕໍ່ໄປ;
ແຕ່ ພຣະຢາເວຊົງເປັນຄວາມສະຫວ່າງຂອງເຈົ້າຕະຫລອດໄປເປັນນິດ, ແລະພຣະເຈົ້າຂອງເຈົ້າຈະຊົງເປັນສະຫງ່າຣາສີຂອງເຈົ້າ.
[20]ດວງຕາເວັນຂອງເຈົ້າຈະບໍ່ຕົກອີກຕໍ່ໄປ, ແລະດວງເດືອນຂອງເຈົ້າຈະບໍ່ຖອຍກັບແລະຫາຍໄປອີກ;
ເພາະວ່າພຣະຢາເວຈະເປັນຄວາມສະຫວ່າງອັນເປັນນິດຂອງເຈົ້າ, ແລະວັນແຫ່ງຄວາມທຸກໂສກຂອງເຈົ້າຈະສິ້ນສຸດລົງ.
[21]ຊົນຊາດຂອງເຈົ້າຈະເປັນຄົນຊອບທຳ; ພວກເຂົາຈະໄດ້ຮັບແຜ່ນດິນເປັນກຳມະສິດຕະຫລອດໄປ, ກິ່ງທີ່ເຮົາປູກ,
ຜົນງານແຫ່ງມືຂອງເຮົາທີ່ເຮົາຈະເຮັດໃຫ້ໄດ້ຮັບກຽດ. [22]ຜູ້ເລັກນ້ອຍຈະກາຍເປັນພັນຄົນ,
ແລະຄົນເລັກນ້ອຍຈະການເປັນປະຊາຊາດທີ່ເຂັ້ມແຂງ; ເຮົາເອງຄືພຣະຢາເວ, ຈະປະຕິບັດສິ່ງເຫລົ່ານີ້ໃຫ້ສຳເລັດຢ່າງວ່ອງໄວເມື່ອເຖິງເວລາ.

 generated on Tue Jun 17 19:01:42 2025

# 61

[1]ພຣະວິນຍານຂອງພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ເຫນືອຂ້ານ້ອຍ,
ເພາະວ່າພຣະຢາເວໄດ້ຊົງເຈີມຂ້ານ້ອຍໄວ້ເພື່ອປະກາດຂ່າວດີແກ່ຄົນທີ່ທຸກໃຈ.
ພຣະອົງໄດ້ໃຊ້ຂ້ານ້ອຍໄປຮັກສາໃຈຄົນທີ່ຊອກຊໍ້າລະກໍາໃຈ, ເພື່ອປະກາດອິດສະຫລະພາບໃຫ້ແກ່ຜູ້ທີ່ຖືກຈັບເປັນສະເລີຍ, ແລະ
ການເປີດຄຸກໃຫ້ຜູ້ທີ່ຖືກກັກຂັງ.

[2]ພຣະອົງໄດ້ສົ່ງຂ້ານ້ອຍໄປເພື່ອປະກາດປີແຫ່ງຄວາມໂປດປານຂອງພຣະຢາເວ, ວັນແຫ່ງການແກ້ແຄ້ນຂອງພຣະເຈົ້າຂອງພວກເຮົາ,
ແລະເພື່ອເລົ້າໂລມທຸກຄົນທີ່ເສົ້າໂສກ.
[3]ພຣະອົງໄດ້ຊົງສົ່ງຂ້ານ້ອຍໄປເພື່ອທີ່ຈະໃຫ້ພວກຄົນທີ່ໂສກເສົ້າໃນຊີໂອນ - ເພື່ອໃຫ້ພວງມາໄລແທນທີ່ຂີ້ເຖົ່າແກ່ພວກເຂົາ,
ໃຫ້ນໍ້າມັນແຫ່ງຄວາມຄວາມຍິນດີແທນທີ່ຄວາມເສົ້າໂສກໃຈ, ໃຫ້ເສື້ອຄຸມແຫ່ງການສັນລະເສີນແທນທີ່ຈິດວິນຍານທີ່ທໍ້ແທ້,
ເພື່ອຈະເອີ້ນພວກເຂົາວ່າຕົ້ນໂອກແຫ່ງຄວາມຊອບທໍາ, ທີ່ພຣະຢາເວຊົງປູກໄວ້, ເພື່ອທີ່ພຣະອົງຈະໄດ້ຮັບກຽດຕິຍົດ.
[4]ພວກເຂົາຈະສ້າງຊາກປະຫລັກຫັກພັງເກົ່າແກ່ຄືນໃຫມ່; ພວກເຂົາຈະຟື້ນຟູທີ່ຮ້າງເປົ່າໃນອະດີດຂຶ້ນ.
ພວກເຂົາຈະຟື້ນຟູບັນດາເມືອງທີ່ປະຫລັກຫັກຟັງຂຶ້ນມາ, ຄືທີ່ຮ້າງເປົ່າແຕ່ກ່ອນມາຫລາຍຊົ່ວອາຍຸຄົນ.[5]ພວກຄົນຕ່າງຊາດຈະຢືນແລະລ້ຽງແບ້
ແກະ ຂອງພວກເຈົ້າ, ແລະພວກລູກຊາຍຂອງຄົນຕ່າງຊາດຈະເຮັດວຽກໃນທົ່ງນາແລະສວນອະງຸ່ນຂອງພວກເຈົ້າ.
[6]ພວກເຈົ້າຈະໄດ້ຮັບການຂະຫນານນາມວ່າເປັນປະໂລຫິດຂອງພຣະຢາເວ;
ພວກເຂົາຈະເອີ້ນພວກເຈົ້າວ່າເປັນຜູ້ຮັບໃຊ້ຂອງພະເຈົ້າຂອງພວກເຮົາ. ພວກເຈົ້າຈະກິນຄວາມອຸດົມສົມບູນຂອງບັນດາປະຊາຊາດ,
ແລະພວກເຈົ້າຈະອວດອ້າງຊັບສົມບັດຂອງພວກເຂົາ.[7]ພວກເຈົ້າຈະມີເປັນສອງເທົ່າແທນທີ່ຄວາມອັບອາຍຂອງພວກເຈົ້າ;
ແລະພວກເຂົາຈະປິຕິຍິນດີໃນສ່ວນແບ່ງຂອງພວກເຂົາແທນທີ່ຄວາມອັບອາຍ.
ດັ່ງນັ້ນພວກເຂົາຈະມີສ່ວນແບ່ງໃນແຜ່ນດິນຂອງພວກເຂົາເປັນສອງເທົ່າ; ຄວາມຍິນດີອັນເປັນນິດຈະເປັນຂອງພວກເຂົາ.
[8]ເພາະເຮົາຄື, ພຣະຢາເວ, ຜູ້ທີ່ຮັກຄວາມຍຸດຕິທໍາ, ແລະກຽດຊັງການກົດຂີ່ແລະອາຊະຍາກໍາທີ່ຮຸນແຮງ.
ເຮົາຈະຕອບແທນພວກເຂົາຢ່າງຊື່ສັດ, ແລະ ເຮົາຈະເຮັດພັນທະສັນຍາຕະຫລອດໄປກັບພວກເຂົາ.
[9]ເຊື້ອສາຍຂອງພວກເຂົາຈະເປັນທີ່ຮູ້ຈັກໃນບັນດາປະຊາຊາດ, ແລະ ລູກຫລານຂອງພວກເຂົາຈະເປັນທີ່ຮູ້ຈັກໃນທ່າມກາງຊົນຊາດທັງຫລາຍ.
ທຸກຄົນທີ່ເຫັນພວກເຂົາຈະຈົດຈໍາພວກເຂົາໄດ້ວ່າ, ພວກເຂົາແມ່ນປະຊາຊົນທີ່ພຣະຢາເວຊົງອວຍພອນ.
[10]ຂ້ານ້ອຍຈະປິຕິຍິນດີຢ່າງຍິ່ງຕໍ່ພຣະຢາເວ; ຂ້ານ້ອຍຈະຍິນດີຢ່າງຍິ່ງໃນພຣະເຈົ້າຂອງຂ້ານ້ອຍ.
ເພາະພຣະອົງໄດ້ຊົງສວມຂ້ານ້ອຍດວ້ຍເສື້ອຜ້າແຫ່ງຄວາມລອດ; ພຣະອົງໄດ້ສວມເສື້ອຄຸມແຫ່ງຄວາມຊອບທໍາໃຫ້ຂ້ານ້ອຍ,
ເຫມືອນກັບເຈົ້າບ່າວປະດັບຕົວເອງດ້ວຍຜ້າພັນຫົວ, ແລະເຫມືອນເຈົ້າສາວທີ່ປະດັບຕົວເອງດ້ວຍເພັດພອຍຂອງນາງ.
[11]ເພາະວ່າແຜ່ນດິນໂລກຈະເຮັດໃຫ້ຫນໍ່ຂອງມັນປົ່ງຂຶ້ນມາ, ແລະໃນສວນເຮັດໃຫ້ສິ່ງທີ່ປູກໃນນັ້ນປົ່ງຂຶ້ນມາຢ່າງໃດ,
ດັ່ງນັ້ນພຣະຢາເວອົງພຣະຜູ້ເປັນເຈົ້າຈະເຮັດໃຫ້ຄວາມຊອບທໍາແລະການສັນລະເສີນເກີດຂຶ້ນມາຕໍ່ຫນ້າປະຊາຊາດທັງຫມົດຢ່າງນັ້ນ.

 generated on Tue Jun 17 19:01:42 2025

62
[1]ເພາະເຫັນແກ່ຊີໂອນເຮົາຈະບໍ່ມິດງຽບແລະເພາະເຫັນແກ່ກຸງເຢລູຊາເລັມເຮົາຈະບໍ່ມິດງຽບໄປ,
ຈົນກວ່າຄວາມຊອບທຳຂອງນະຄອນນີ້ຈະອອກມາຢ່າງສະຫວ່າງສົດໃສ, ແລະຄວາມລອດຂອງນະຄອນນີ້ຈະອອກໄປຄືກັບໂຄມໄຟຍາມຄ່ຳມືດ.
[2]ປະຊາຊາດທັງຫລາຍຈະໄດ້ເຫັນຄວາມຊອບທຳຂອງເຈົ້າ, ແລະກະສັດທັງຫມົດຄາຈະເຫັນສະຫງ່າລາສີຂອງເຈົ້າ.
ເຂົາຈະເອີ້ນເຈົ້າດ້ວຍນາມໃຫມ່ທີ່ພຣະຢາເວຊົງເລືອກໃຫ້.

[3]ເຈົ້າຈະເປັນມົງກຸດອັນງົດງາມຢູ່ໃນມືຂອງພຣະຢາເວ, ແລະເປັນມົງກຸດໃນມືຂອງພຣະເຈົ້າຂອງເຈົ້າດ້ວຍ.
[4]ຄົນຈະບໍ່ມີການເວົ້າກ່ຽວກັບເຈົ້າອີກຕໍ່ໄປວ່າ, "ຜູ້ຖືກປະຖິ້ມໄວ້"; ຫລືແຜ່ນດິນຂອງເຈົ້າຈະບໍ່ຖືກເອີ້ນວ່າ, "ບ່ອນຮ້າງເປົ່າ." ອີກຕໍ່ໄປແທ້ຈິງແລ້ວ,
ເຈົ້າຈະຖືກເອີ້ນວ່າ "ຄວາມຍິນດີຂອງເຮົາແມ່ນຢູ່ໃນນາງ," ແລະເອີ້ນແຜ່ນດິນຂອງເຈົ້າວ່າ "ແຕ່ງງານແລ້ວ,"
ເພາະວ່າພຣະເຈົ້າຢາເວມີຄວາມປິຕິຍິນດີໃນເຈົ້າ, ແລະ ແຜ່ນດິນຂອງເຈົ້າຈະແຕ່ງງານ.
[5]ແທ້ຈິງແລ້ວ, ຊາຍຫນຸ່ມແຕ່ງງານກັບຍິງສາວຢ່າງໃດ, ບັນດາພວກລູກຊາຍຂອງເຈົ້າຈະແຕ່ງງານກັບເຈົ້າຢ່າງນັ້ນ,
ແລະເຈົ້າບ່າວມີຄວາມປິຕິຍິນດີກັບເຈົ້າສາວຂອງລາວຢ່າງໃດ, ພຣະເຈົ້າຂອງເຈົ້າຈະປິຕິຍິນດີກັບເຈົ້າຢ່າງນັ້ນ.
[6]ເຮົາໄດ້ວາງຜູ້ເຝົ້າຍາມຢູ່ເທິງກຳແພງຂອງເຈົ້າ, ເຢຣູຊາເລັມ; ພວກເຂົາຈະບໍ່ງຽບສຽງເລີຍບໍ່ວ່າໃນຕອນກາງເວັນຫລືຕອນກາງຄືນ.
ພວກເຈົ້າຜູ້ທີ່ຄອຍເຕືອນຄວາມຈຳຂອງພຣະຢາເວຈະຕ້ອງບໍ່ຢຸດພັກ.
[7]ຢ່າຍອມໃຫ້ພຣະອົງຊົງຢຸດພັກຈົນກວ່າພຣະອົງໄດ້ສ້າງກຸງເຢຣູຊາເລັມຂຶ້ນມາໃຫມ່ແລະເຮັດໃຫ້ເມືອງນັ້ນເປັນທີ່ສັນລະເສີນໃນແຜ່ນດິນໂລກ.
[8]ພຣະຢາເວໄດ້ຊົງປະຕິຍານໂດຍໃຊ້ມືຂວາຂອງພຣະອົງແລະແຂນແຫ່ງຣິດທານຸພາບຂອງພຣະອົງວ່າ,“
ວ່າເຮົາຈະບໍ່ເອົາເຂົ້າຂອງເຈົ້າເປັນອາຫານ ສຳລັບສັດຕູຂອງເຈົ້າອີກຕໍ່ໄປ. ພວກຄົນຕ່າງຊາດຈະບໍ່ໄດ້ດື່ມເຫລົ້າອາງຸ່ນໃຫມ່ຂອງເຈົ້າ
ເຊິ່ງເຈົ້າໄດ້ເຮັດວຽກມານັ້ນ.[9]ເພາະວ່າຜູ້ທີ່ເກັບກ່ຽວເຂົ້າຈະໄດ້ກິນເຂົ້າແລະສັນລະເສີນພຣະຜູ້ເປັນເຈົ້າ,
ແລະຜູ້ທີ່ເກັບຫມາກອະງຸ່ນຈະດື່ມເຫລົ້າອາງຸ່ນຢູ່ໃນສະຖານທີ່ນະມັດສະການທີ່ບໍລິສຸດຂອງເຮົາ."
[10]ຈົ່ງຜ່ານເຂົ້າມາເຖີດ, ຈົ່ງຜ່ານປະຕູເຂົ້າມາ! ຈົ່ງກຽມທາງໄວ້ໃຫ້ຊົນຊາດນີ້! ຈົ່ງສ້າງຂຶ້ນມາ, ຈົ່ງສ້າງທາງຫລວງ!
ຈົ່ງເກັບກວດຫີນເຫລົ່ານັ້ນອອກໄປເສຍ! ຈົ່ງຍົກສູງທຸງສັນຍານໃຫ້ແກ່ບັນດາປະຊາຊາດ!
[11]ເບິ່ງແມ, ພຣະຢາເວຊົງປະກາດໄປຍັງສຸດປາຍແຜ່ນດິນໂລກ, "ຈົ່ງກ່າວແກ່ທິດາຂອງຊີໂອນວ່າ: ຈົ່ງເບິ່ງ,
ພຣະຜູ້ຊ່ວຍໃຫ້ລອດຂອງເຈົ້າກຳລັງສະເດັດມາ! ເບິ່ງແມ, ລາງວັນຂອງພຣະອົງກໍຢູ່ກັບພຣະອົງ
ແລະຄ່າຕອບແທນຂອງພຣະອົງຈະໄປຢູ່ຕໍ່ພຣະພັກຂອງພຣະອົງ[12]ພວກເຂົາຈະເອີ້ນພວກເຈົ້າວ່າ, "ຊົນຊາດບໍລິສຸດ;
ຜູ້ໄດ້ຮັບການຊົງໄຖ່ຂອງພຣະຢາເວ", ແລະເຈົ້າຈະຖືກເອີ້ນວ່າ "ຫນ້າປາຖະຫນາ ເມືອງທີ່ບໍ່ຖືກປະຖິ້ມ;


generated on Tue Jun 17 19:01:42 2025

63 [1]ນີ້ແມ່ນໃຜນໍທີ່ມາຈາກເອໂດມ, ຜູ້ທີ່ນຸ່ງເສື້ອຜ້າສີແດງຈາກເມືອງໂບສະຣາ, ຜູ້ນັ້ນແມ່ນໃຜນໍທີ່ສວມເຄື່ອງທົງຂອງກະສັດ,
ຜູ້ທີ່ກ້າວເດີນມາດ້ວຍຄວາມຫມັ້ນໃຈເພາະອານຸພາບອັນຍິ່ງໃຫຍ່ຂອງພຣະອົງ? ນີ້ຄືເຮົາເອງ, ທີ່ກ່າວດ້ວຍຄວາມຊອບ
ທຳແລະເຕັມໄປດ້ວຍຣິດທານຸພາບທີ່ສາມາດຊ່ວຍໃຫ້ລອດໄດ້.[2]ເປັນຫຍັງເຄື່ອງນຸ່ງຂອງພຣະອົງຈຶ່ງເປັນສີແດງ, ແລະ
ເປັນຫຍັງເຄື່ອງນຸ່ງເຫລົ່ານັ້ນເບິ່ງຄືວ່າພຣະອົງໄດ້ຊົງຢຽບຫມາກອະງຸ່ນຢູ່ໃນຖັງຢຽບຫມາກອະງຸ່ນມາ?

[3]ເຮົາໄດ້ຢຽບຫມາກອາງຸ່ນຢູ່ໃນຖັງຢຽບຫມາກອາງຸ່ນພຽງຜູ້ດຽວ, ແລະບໍ່ມີຜູ້ໃດຈາກປະຊາຊາດທັງຫລາຍໄດ້ຢູ່ຮ່ວມກັບເຮົາເລີຍ.
ເຮົາໄດ້ຢຽບຢ່ຳພວກເຂົາດ້ວຍຄວາມໂກດຮ້າຍຂອງເຮົາ.
ແລະເລືອດຂອງພວກເຂົາກໍເປິເປື້ອນຢູ່ເຄື່ອງນຸ່ງຂອງເຮົາແລະເຮັດໃຫ້ເສື້ອຜ້າຂອງເຮົາເປື້ອນເຕັມໄປຫມົດ.
[4]ເພາະເຮົາໄດ້ເບິ່ງໄປທາງຫນ້າເຖິງວັນແຫ່ງການແກ້ແຄ້ນ, ແລະປີແຫ່ງການໄຖ່ເຮົາໄດ້ມາເຖິງແລ້ວ.
[5]ເຮົາໄດ້ຫລຽວເບິ່ງ, ແລະບໍ່ມີໃຜຈັກຄົນຊ່ວຍເຫລືອ. ເຮົາແປກໃຈທີ່ບໍ່ມີຜູ້ໃດທີ່ຈະຊ່ວຍເລີຍ,
ແຕ່ແຂນຂອງເຮົາເອງໄດ້ນຳເອົາໄຊຊະນະມາໃຫ້ເຮົາ, ແລະຄວາມໂກດຮ້າຍຮຸນແຮງຂອງເຮົາໄດ້ຂັບເຄື່ອນເຮົາ.
[6]ເຮົາໄດ້ຢຽບຢ່ຳຊົນຊາດທັງຫລາຍດ້ວຍຄວາມຄຽດແຄ້ນຂອງເຮົາແລະເຮັດໃຫ້ພວກເຂົາມຶນເມົາດ້ວຍຄວາມໂກດຮ້າຍຂອງເຮົາ,
ແລະເຮົາໄດ້ຖອກໂລຫິດຂອງພວກເຂົາລົງເທິງແຜ່ນດິນໂລກ.
[7]ຂ້ານ້ອຍຈະບອກກ່ຽວກັບການກະທຳຂອງຄວາມສັດຊື່ແຫ່ງພັນທະສັນຍາຂອງພຣະຢາເວ, ການກະທຳທີ່ຫນ້າສັນລະເສີນຂອງພຣະຢາເວ.
ຂ້ານ້ອຍຈະບອກເຖິງທຸກສິ່ງທີ່ພຣະຢາເວໄດ້ຊົງເຮັດເພື່ອພວກເຮົາ, ແລະຄວາມດີງາມອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ເຊື້ອສາຍອິດສະຣາເອນ.
ພຣະອົງໄດ້ຊົງສຳແດງພຣະກາຣຸນານີ້ຕໍ່ພວກເຮົາຍ້ອນຄວາມເມດຕາຂອງພຣະອົງ,
ແລະດ້ວຍການກະທຳທີ່ສັດຊື່ໃນພັນທະສັນຍາຢ່າງຫລວງຫລາຍ.[8]ເພາະພຣະອົງໄດ້ເວົ້າວ່າ, "ແນ່ນອນວ່າພວກເຂົາແມ່ນຊົນຊາດຂອງເຮົາ,
ບຸດທັງຫລາຍຜູ້ທີ່ບໍ່ທໍລະຍົດ." ພຣະອົງໄດ້ຊົງເປັນຜູ້ຊ່ອຍໃຫ້ລອດຂອງພວກເຂົາ.
[9]ພຣະອົງຊົງເປັນທຸກ ເນື່ອງຈາກຄວາມທຸກຍາກລຳບາກທັງຫມົດຂອງພວກເຂົາດ້ວຍ,
ແລະທູດສະຫວັນຈາກທີ່ປະທັບຂອງພຣະອົງໄດ້ຊ່ວຍພວກເຂົາໃຫ້ລອດ. ໃນຄວາມຮັກແລະຄວາມເມດຕາຂອງພຣະອົງ,
ແລະພຣະອົງໄດ້ຊູພວກເຂົາຂຶ້ນແລະອູ້ມພວກເຂົາໃຫ້ຜ່ານພົ້ນມາໄດ້ຕະຫລອດສະໄຫມໂບຮານ.
[10]ແຕ່ພວກເຂົາໄດ້ທໍລະຍົດແລະເຮັດໃຫ້ພຣະວິນຍານບໍລິສຸດຂອງພຣະອົງຊົງເສຍພຣະໄທ.
ດັ່ງນັ້ນພຣະອົງຈຶ່ງກາຍເປັນສັດຕູຂອງພວກເຂົາແລະຕໍ່ສູ້ກັບພວກເຂົາ.
[11]ປະຊາຊົນຂອງພຣະອົງໄດ້ຄິດລະລຶກເຖິງໂມເຊໃນສະໄຫມບູຮານ. ພວກເຂົາໄດ້ເວົ້າວ່າ, "ພຣະເຈົ້າຢູ່ໃສ,
ຜູ້ທີ່ໄດ້ນຳພວກເຂົາຂຶ້ນມາຈາກທະເລພ້ອມດ້ວຍຜູ້ລ້ຽງຝູງແກະຂອງພຣະອົງ? ພຣະເຈົ້າຢູ່ໃສ,
ຜູ້ທີ່ວາງພຣະວິນຍານບໍລິສຸດຂອງພຣະອົງຢູ່ໃນພວກເຂົາ?
[12]ພຣະເຈົ້າຜູ້ທີ່ຊົງໃສ່ພຣະວິນຍານບໍລິສຸດຂອງພຣະອົງໄວ້ທ່າມກາງພວກເຂົາຢູ່ໃສ,
ພຣະເຈົ້າຜູ້ທີ່ໄດ້ຊົງເຮັດໃຫ້ຣິດອຳນາດອັນຮຸ່ງເຮືອງຂອງພຣະອົງໄປພ້ອມກັບມືຂວາຂອງໂມເຊ, ແລະຜູ້ຊົງແຍກນ້ຳອອກຢູ່ຕໍ່ຫນ້າພວກເຂົາ,
ເພື່ອເຮັດໃຫ້ພຣະນາມນິລັນດອນຂອງພຣະອົງເອງຊົງຢູ່ທີ່ໃດ?[13]ພຣະເຈົ້າຊົງຢູ່ທີ່ໃດ, ຜູ້ທີ່ພາພວກເຂົາຜ່ານນ້ຳເລິກມາໄດ້?
ເຫມືອນກັບມ້າທີ່ແລ່ນຢູ່ເທິງພື້ນດິນທີ່ຮາບພຽງ, ເພື່ອພວກເຂົາບໍ່ໄດ້ສະດຸດເລີຍ.
[14]ເຫມືອນຝູງສັດທີ່ລົງໄປໃນຮ່ອມພູສັນໃດ, ພຣະວິນຍານຂອງພຣະຢາເວໄດ້ຊົງໃຫ້ພວກເຂົາພັກສະງົບສັນນັ້ນ.
ດັ່ງນັ້ນພຣະອົງຈຶ່ງຊົງນຳພາປະຊາຊົນຂອງພຣະອົງ, ເພື່ອເຮັດໃຫ້ພຣະນາມຂອງພຣະອົງເປັນທີ່ສັນລະເສີນ.
[15]ຂໍຊົງເບິ່ງລົງມາຈາກສະຟ້າຫວັນແລະຊົງໃສ່ພະໄທຈາກທີ່ປະທັບອັນບໍລິສຸດແລະສະຫງ່າງາມຂອງພຣະອົງ.
ຄວາມກະຕືລືລົ້ນແລະການກະທຳອັນຍິ່ງໃຫຍ່ຂອງພຣະອົງຢູ່ໃສ?
ຄວາມສົງສານແລະພຣະກາລຸນາຂອງພຣະອົງໄດ້ຖືກຍຶດໄປຈາກພວກຂ້ານ້ອຍທັງຫລາຍ.
[16]ເພາະວ່າພຣະອົງຊົງເປັນພຣະບິດາຂອງຂ້ານ້ອຍທັງຫລາຍ, ເຖິງແມ່ນວ່າອັບຣາຮາມບໍ່ຮູ້ຈັກພວກຂ້ານ້ອຍ,
ແລະອິດສະຣາເອນຈື່ພວກຂ້ານ້ອຍບໍ່ໄດ້, ຂ້າແດ່ພຣະຢາເວ, ພຣະອົງຊົງເປັນພຣະບິດາຂອງຂ້ານ້ອຍທັງຫລາຍ.'
ພຣະນາມຂອງພຣະອົງຕັ້ງແຕ່ສະໄຫມບູຮານຄື 'ພຣະຜູ້ໄຖ່ຂອງພວກເຮົາ'
[17]ຂ້າແດ່ພຣະຢາເວ, ເປັນຫຍັງພຣະອົງຈຶ່ງເຮັດໃຫ້ພວກຂ້ານ້ອຍຫລົງທາງໄປຈາກທາງຂອງພຣະອົງແລະເຮັດໃຫ້ໃຈຂອງຂ້ານ້ອຍແຂງກະດ້າງ,
ຈົນວ່າພວກຂ້ານ້ອຍບໍ່ເຊື່ອຟັງພຣະອົງ? ຂໍຊົງກັບຄືນມາເພາະເຫັນແກ່ບັນດາຜູ້ຮັບໃຊ້ຂອງພຣະອົງ,
ຄືເຜົ່າທັງຫລາຍອັນເປັນມູນມໍລະດົກຂອງພຣະອົງ.
[18]ຊົນຊາດຂອງພຣະອົງໄດ້ຄອບຄອງສະຖານບໍລິສຸດຂອງພຣະອົງເປັນເວລາສັ້ນໆ, ແຕ່ຕໍ່ມາສັດຕູຂອງພວກຂ້ານ້ອຍກໍຢຽບຢ່ຳສະຖານທີ່ນັ້ນ.
[19]ຂ້ານ້ອຍທັງຫລາຍໄດ້ກາຍເປັນຄືກັບຄົນເຫລົ່ານັ້ນຜູ້ທີ່ພຣະອົງບໍ່ເຄີຍປົກຄອງຄືກັນກັບຄົນເຫລົ່ານັ້ນຜູ້ທີ່ບໍ່ເຄີຍຖືກເອີ້ນໂດຍພຣະນາມຂອງພຣະອົງ.”


generated on Tue Jun 17 19:01:42 2025

64 [1]"ໂອ້, ຖ້າພຣະອົງໄດ້ຊົງແຍກທ້ອງຟ້າສະຫວັນແລະສະເດັດລົງມາ! ພູເຂົາທັງຫລາຍກໍສັ່ນສະເທືອນຕໍ່ພຣະພັກພຣະອົງ,
[2]ເຫມືອນຕອນທີ່ໄຟໄຫມ້ກອງໄມ້, ຫລືຕອນທີ່ໄຟເຮັດໃຫ້ນໍ້າຟົດ. ໂອ້,
ເພື່ອໃຫ້ພວກສັດຕູຈະໄດ້ຮູ້ຈັກພຣະນາມຂອງພຣະອົງເພື່ອບັນດາປະຊາຊາດຈະໂຕສັ່ນຢູ່ຕໍ່ຫນ້າຂອງພຣະອົງ!

[3]ກ່ອນຫນ້ານີ້, ເມື່ອພຣະອົງໄດ້ຊົງເຮັດສິ່ງອັດສະຈັນຕ່າງໆທີ່ພວກເຮົາຄາດບໍ່ເຖິງ, ພຣະອົງໄດ້ສະເດັດລົງມາ,
ແລະພູເຂົາທັງຫລາຍໄດ້ສັ່ນສະເທືອນຕໍ່ພຣະພັກພຣະອົງ.[4]ຕັ້ງແຕ່ສະໄຫມໂບຮານມາບໍ່ມີຜູ້ໃດໄດ້ຍິນຫລືຮັບຮູ້,
ຫລືເຄີຍໄດ້ເຫັນພຣະເຈົ້າໃດດ້ວຍຕານອກເຫນືອຈາກພຣະອົງ, ຜູ້ທີ່ກະທໍາສິ່ງຕ່າງໆເພື່ອຜູ້ທີ່ລໍຄອຍພຣະອົງ.
[5]ພຣະອົງສະເດັດມາຊ່ວຍຄົນເຫລົ່ານັ້ນຜູ້ທີ່ປິຕິຍິນດີໃນການເຮັດສິ່ງທີ່ຊອບທໍາ,
ຄົນເຫລົ່ານັ້ນທີ່ລະນຶກເຖິງທາງຂອງພຣະອົງແລະເຊື່ອຟັງພຣະອົງ. ພຣະອົງໄດ້ຊົງໂກດຮ້າຍເມື່ອພວກຂ້ານ້ອຍໄດ້ເຮັດຜິດບາບ.
ພວກຂ້ານ້ອຍຈະໄດ້ຮັບການຊ່ວຍເຫລືອໃນທາງຂອງພຣະອົງສະເຫມີ.
[6]ເພາະວ່າພວກຂ້ານ້ອຍທຸກຄົນເປັນຄົນເຫມືອນຜູ້ທີ່ເປັນມົນທິນ,
ແລະການກະທໍາທີ່ຊອບທໍາທຸກຢ່າງຂອງພວກຂ້ານ້ອຍກໍເຫມືອນດັ່ງຜ້າເສັດທີ່ສົກກະປົກ.
ພວກຂ້າພຣະອົງທຸກຄົນໄດ້ຫ່ຽວແຫ້ງໄປເຫມືອນໃບໄມ້; ຄວາມຜິດບາບທັງຫລາຍຂອງພວກຂ້ານ້ອຍເປັນເຫມືອນລົມທີ່ຫອບພວກຂ້ານ້ອຍໄປ.
[7]ບໍ່ມີຜູ້ໃດຮ້ອງທູນຕໍ່ພຣະນາມຂອງພຣະອົງ, ຜູ້ທີ່ພະຍາຍາມຈະຍຶດພຣະອົງໄວ້.
ເພາະພຣະອົງໄດ້ເຊື່ອງພຣະພັກຂອງພຣະອົງຈາກພວກຂ້ານ້ອຍແລະເຮັດໃຫ້ພວກຂ້ານ້ອຍສູນເສຍໄປໃນມືຂອງຄວາມຜິດບາບຂອງພວກຂ້ານ້ອຍ.
[8]ຂ້າແດ່, ພຣະຢາເວ, ພຣະອົງຊົງເປັນພຣະບິດາຂອງພວກຂ້ານ້ອຍທັງຫລາຍ; ພວກຂ້ານ້ອຍແມ່ນດິນຫນຽວ. ພຣະອົງຊົງເປັນຊ່າງປັ້ນ;
ແລະພວກຂ້ານ້ອຍທຸກຄົນແມ່ນຜົນງານແຫ່ງຝີພຣະຫັດຂອງພຣະອົງ.[9]ຂ້າແດ່ພຣະຢາເວ, ຂໍຢ່າໄດ້ໂກດຮ້າຍເກີນໄປ,
ຫລືຈົດຈໍາຄວາມບາບຂອງພວກຂ້ານ້ອຍຢູ່ສະເຫມີ. ຂໍຊົງໂປດເບິ່ງພວກຂ້ານ້ອຍທຸກຄົນວ່າ, ເປັນປະຊາຊົນຂອງພຣະອົງ.
[10]ເມືອງທີ່ບໍລິສຸດທັງຫລາຍຂອງພຣະອົງໄດ້ກາຍເປັນຖິ່ນແຫ້ງແລ້ງກັນດານ; ຊີໂອນກໍກາຍເປັນຖິ່ນແຫ້ງແລ້ງກັນດານ,
ເຢຣູຊາເລັມກາຍເປັນບ່ອນທີ່ຮົກຮ້າງຫວ່າງເປົ່າ.[11]ພຣະວິຫານອັນບໍລິສຸດແລະສວຍງາມຂອງພວກຂ້ານ້ອຍ,
ທີ່ຊຶ່ງບັນພະບຸລຸດຂອງພວກຂ້ານ້ອຍໄດ້ຍ້ອງຍໍສັນລະເສີນພຣະອົງ, ໄດ້ຖືກໄຟເຜົາທໍາລາຍ,
ແລະທຸກສິ່ງທີ່ເປັນທີ່ຮັກຍິ່ງກໍເປັນຊາກປະຫລັກຫັກພັງ.[12]ຂ້າແດ່ພຣະຢາເວ, ພຣະອົງຍັງຊົງຢັບຢັ້ງຢູ່ໄດ້ຢ່າງໃດ?
ພຣະອົງຍັງຊົງງຽບແລະເຮັດໃຫ້ພວກຂ້ານ້ອຍໄດ້ຮັບຄວາມອັບອາຍຕະຫລອດໄປໄດ້ຢ່າໃດ?"

 generated on Tue Jun 17 19:01:42 2025

65 [1]"ເຮົາພ້ອມແລ້ວທີ່ຈະຕອບຄຳພາວັນນາອະທິຖານພວກຄົນທີ່ບໍ່ໄດ້ຂໍນັ້ນ; ເຮົາພ້ອມແລ້ວທີ່ຈະໃຫ້ພວກຄົນທີ່ບໍ່ໄດ້ຊອກຫານັ້ນໄດ້ພົບ,
ເຮົາເວົ້າວ່າ," ເຮົາຢູ່ທີ່ນີ້! ເຮົາຢູ່ທີ່ນີ້!
ຕໍ່ປະຊາຊາດທີ່ບໍ່ໄດ້ເອີ້ນຕາມພຣະນາມຂອງເຮົາ[2]ເຮົາໄດ້ຍື່ນມືຂອງເຮົາອອກໄປຕະຫລອດວັນແກ່ຊົນຊາດທີ່ດື້ດ້ານ, ຜູ້ທີ່ດຳເນີນໃນທາງທີ່ບໍ່ດີ,
ຜູ້ທີ່ດຳເນີນຕາມຄວາມຄິດແລະແຜນການຂອງຕົນເອງ!

[3]ພວກເຂົາແມ່ນຊົນຊາດທີ່ເຮັດຜິດຕໍ່ເຮົາຕະຫລອດເວລາ, ຄືການຖວາຍເຄື່ອງບູຊາທັງຫລາຍໃນສວນຕ່າງໆ,
ແລະເຜົາເຄື່ອງຫອມເທິງກ້ອນດິນຈີ່.[4]ພວກເຂົານັ່ງຢູ່ທ່າມກາງບ່ອນຝັງສົບແລະເຝົ້າລະວັງຕະຫລອດຄືນ,
ແລະກິນຊີ້ນຫມູພ້ອມກັບນ້ຳແກງຂອງຊີ້ນທີ່ຫນ້າລັງກຽດໃນຈານຂອງພວກເຂົາ.
[5]ພວກເຂົາເວົ້າວ່າ, 'ຈົ່ງຢືນຢູ່ໄກໆ, ຢ່າເຂົ້າມາໃກ້ຂ້ອຍ, ເພາະຂ້ອຍບໍລິສຸດກວ່າເຈົ້າ.' ສິ່ງເຫລົ່ານີ້ເປັນຄວັນໃນຮູດັງຂອງເຮົາ,
ເປັນໄຟທີ່ລຸກໄຫມ້ຢູ່ຕະຫລອດມື້.
[6]ເບິ່ງແມ, ມີຄຳທີ່ຂຽນໄວ້ຢູ່ຕໍ່ຫນ້າເຮົາວ່າ: ເຮົາຈະບໍ່ມິດງຽບອີກຕໍ່ໄປ, ເພາະວ່າເຮົາຈະແກ້ແຄ້ນພວກເຂົາ;
ເຮົາຈະຕອບແທນພວກເຂົາໄວ້ໃນຕັກຂອງພວກເຂົາ.[7]ເພາະຄວາມບາບຂອງພວກເຂົາ ແລະຄວາມບາບຂອງບັນດາບັນພະບູລຸດຂອງພວກເຂົາ,"
ພຣະຢາເວກ່າວວ່າ." ເຮົາຈະຕອບແທນພວກເຂົາສຳລັບເຄື່ອງຫອມບູຊາເທິງພູເຂົາ ແລະ
ສຳລັບການກ່າວຄຳຫຍາບຊ້າຕໍ່ເຮົາເທິງເນີນພູທັງຫລາຍ.
ດ້ວຍເຫດນີ້ເຮົາຈະຕວງການກະທຳໃນອະດີດຂອງພວກເຂົາລົງໃນຕັກຂອງພວກເຂົາ."
[8]ນີ້ແມ່ນສິ່ງທີ່ພຣະເຈົ້າຢາເວກ່າວວ່າ, "ເມື່ອນ້ຳອະງຸ່ນພົບໄດ້ໃນພວງອະງຸ່ນເມື່ອຄົນຫນຶ່ງກ່າວວ່າ, 'ຢ່າທຳລາຍມັນເລີຍ,
ເພາະວ່າຍັງມີສິ່ງທີ່ດີໃນຕົວມັນຢູ່ສັນໃດ,' ນີ້ເປັນສິ່ງທີ່ເຮົາຈະເຮັດເພື່ອເຫັ້ນແກ່ບັນດາຜູ້ຮັບໃຊ້ຂອງເຮົາ: ເຮົາຈະບໍ່ທຳ
ລາຍພວກເຂົາຈົນຫມົດສິ້ນສັນນັ້ນ.
[9]ເຮົາຈະນຳເຊື້ອສາຍມາຈາກຢາໂຄບແລະພວກຄົນຈາກຢູດາຜູ້ທີ່ຈະຄອບຄອງພູເຂົາທັງຫລາຍຂອງເຮົາ.
ຜູ້ທີ່ເຮົາໄດ້ເລືອກໄວ້ຈະໄດ້ຮັບແຜ່ນດິນເປັນກຳມະສິດແລະບັນດາຜູ້ຮັບໃຊ້ຂອງເຮົາຈະອາໄສຢູ່ທີ່ນັ້ນ.
[10]ເມືອງຊາໂຣນຈະກາຍເປັນທົ່ງຫຍ້າສຳລັບຝູງແບ້, ແກະ, ແລະຮ່ອມພູອາໂຄຈະເປັນບ່ອນພັກຜ່ອນຂອງຝູງສັດ,
ເພື່ອຊົນຊາດຂອງເຮົາຜູ້ທີ່ສະແຫວງຫາເຮົາ.
[11]ແຕ່ພວກເຈົ້າຜູ້ທີ່ໄດ້ປະຖິ້ມພຣະຢາເວ, ຜູ້ທີ່ລືມພູເຂົາທີ່ບໍລິສຸດຂອງເຮົາ, ຜູ້ທີ່ຈັດງານລ້ຽງໃຫ້ແກ່ພະຊາຕາ,
ແລະຕື່ມເຫລົ້າອາງຸ່ນປະສົມຈົນເຕັມຈອກໃຫ້ແກ່ພະທີ່ເອີ້ນຊື່ວ່າພະລິຄິດ.
[12]ເຮົາຈະລິຄິດພວກເຈົ້າໃຫ້ແກ່ດາບ, ແລະພວກເຈົ້າທຸກຄົນຈະກົ້ມຫົວລົງຕໍ່ຜູ້ສັງຫານ, ເພາະວ່າເມື່ອເຮົາໄດ້ເອີ້ນພວກເຈົ້າ, ພວກເຈົ້າກໍບໍ່ຕອບ;
ເມື່ອເຮົາໄດ້ເວົ້າ, ພວກເຈົ້າກໍບໍ່ໄດ້ຟັງ. ແຕ່ພວກເຈົ້າໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາ ແລະ ເລືອກທີ່ຈະເຮັດສິ່ງທີ່ເຮັດໃຫ້ເຮົາບໍ່ພໍໃຈ."
[13]ນີ້ແມ່ນສິ່ງທີ່ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວວ່າ,“ ເບິ່ງແມ, ບັນດາຜູ້ຮັບໃຊ້ຂອງເຮົາຈະໄດ້ກິນ, ແຕ່ພວກເຈົ້າຈະຫິວໂຫຍ; ເບິ່ງແມ,
ບັນດາຜູ້ຮັບໃຊ້ຂອງເຮົາຈະໄດ້ດື່ມ, ແຕ່ພວກເຈົ້າຈະຫິວກະຫາຍ; ເບິ່ງແມ, ບັນດາຜູ້ຮັບໃຊ້ຂອງເຮົາຈະປິຕິຍິນດີ
ແຕ່ພວກເຈົ້າຈະໄດ້ຮັບຄວາມອັບອາຍ,[14]ເບິ່ງແມ, ບັນດາຜູ້ຮັບໃຊ້ຂອງເຮົາຈະໂຫ່ຮ້ອງດ້ວຍຄວາມຍິນດີເພາະຄວາມຍິນດີຂອງຫົວໃຈ,
ແຕ່ພວກເຈົ້າຈະຮ້ອງໄຫ້ເພາະຄວາມເຈັບປວດຂອງຫົວໃຈ, ແລະຈະຮ້ອງໄຫ້ຍ້ອນວິນຍານທີ່ຊອກຊ້ຳ.
[15]ພວກເຈົ້າຈະປະຖິ້ມຊື່ຂອງເຈົ້າໄວ້ເບື້ອງຫລັງເປັນຄຳສາບແຊ່ງແກ່ພວກຄົນທີ່ເລືອກໄວ້ຂອງເຮົາທີ່ຈະເວົ້າວ່າ; ເຮົາເອງ,
ພຣະຢາເວອົງພຣະຜູ້ເປັນເຈົ້າຈະຂ້າພວກເຈົ້າ; ເຮົາຈະເອີ້ນບັນດາຜູ້ຮັບໃຊ້ຂອງເຮົາດ້ວຍນາມອື່ນ.
[16]ຜູ້ໃດທີ່ອອກສຽງອວຍພອນໃນແຜ່ນດິນໂລກຈະໄດ້ຮັບພຣະພອນຈາກເຮົາ, ຜູ້ເປັນພຣະເຈົ້າອົງທ່ຽງແທ້. ຜູ້ໃດສາບານເທິງແຜ່ນດິນໂລກເຮົາ,
ຜູ້ເປັນພຣະເຈົ້າແຫ່ງຄວາມຈິງ, ກໍຈະປະຕິຍານເພາະຄວາມທຸກຍາກແຕ່ກ່ອນຈະຖືກລືມໄປ,
ເພາະສິ່ງເຫລົ່ານັ້ນຈະຖືກປິດບັງໄວ້ຈາກສາຍຕາຂອງເຮົາ.
[17]ເພາະສະນັ້ນ ເບິ່ງແມ, ເຮົາຈະສ້າງທ້ອງຟ້າໃຫມ່ແລະແຜ່ນດິນໂລກໃຫມ່; ແລະຈະບໍ່ມີການຈົດຈຳຫລືລະນຶກເຖິງສິ່ງເກົ່າກ່ອນ.
[18]ແຕ່ພວກເຈົ້າຈະຍິນດີແລະເບີກບານໃຈຕະຫລອດໄປໃນສິ່ງທີ່ເຮົາກຳລັງຈະສ້າງຂຶ້ນ. ເບິ່ງແມ,
ເຮົາຈະສ້າງເຢຣູຊາເລັມໃຫ້ເປັນຄວາມປິຕິຍິນດີ, ແລະສ້າງປະຊາຊົນຂອງເມືອງນັ້ນເປັນຄວາມຊື່ນຊົມຍິນດີ.
[19]ເຮົາຈະປິຕິຍິນດີເຫນືອກຸງເຢຣູຊາເລັມແລະຈະຍິນດີເຫນືອຊົນຊາດຂອງເຮົາ;
ຈະບໍ່ໄດ້ຍິນສຽງຮ້ອງໄຫ້ແລະຄຳຄວນຂອງຄວາມທຸກໃຈໃນເມືອງນັ້ນອີກຕໍ່ໄປ.
[20]ຈະບໍ່ມີເດັກເກີດໃຫມ່ທີ່ມີຊີວິດພຽງແຕ່ສອງສາມມື້ຢູ່ບ່ອນນັ້ນອີກຕໍ່ໄປ; ຫລືຜູ້ເຖົ້າຜູ້ແກ່ຈະບໍ່ຕາຍກ່ອນຄົບກຳນົດເວລາຂອງເຂົາ.
ຜູ້ທີ່ຕາຍເມື່ອອາຍຸຫນຶ່ງຮ້ອຍປີກໍຈະຖືວ່າເປັນຄົນຫນຸ່ມ. ຜູ້ໃດທີ່ອາຍຸບໍ່ເຖິງຮ້ອຍປີກໍຈະຖືວ່າເປັນຄົນທີ່ຖືກສາບແຊ່ງ.
[21]ພວກເຂົາຈະສ້າງບ້ານເຮືອນແລະອາໄສຢູ່ທີ່ນັ້ນ, ພວກເຂົາຈະປູກຕົ້ນອະງຸ່ນແລະກິນຫມາກຂອງມັນ.
[22]ພວກເຂົາຈະບໍ່ສ້າງເຮືອນແລະໃຫ້ຄົນອື່ນອາໄສຢູ່ໃນເຮືອນອີກຕໍ່ໄປ; ພວກເຂົາຈະບໍ່ປູກແລະຄົນອື່ນຈະກິນ;
ເພາະວ່າອາຍຸຂອງຕົ້ນໄມ້ຈະເປັນຄືອາຍຸຂອງຊົນຊາດຂອງເຮົາ. ຄົນທີ່ເຮົາເລືອກເຮົາຈະໃຊ້ຜົນງານຂອງມືຂອງພວກເຂົາໄປຍາວນານ.
[23]ພວກເຂົາຈະບໍ່ອອກແຮງງານຢ່າງບໍ່ມີປະໂຫຍດ, ຫລືບໍ່ເກີດລູກທີ່ເຮັດໃຫ້ຜິດຫວັງ.
ເພາະວ່າພວກເຂົາເປັນບຸດຫລານຂອງຜູ້ທີ່ໄດ້ຮັບພຣະພອນຈາກພຣະຢາເວ, ແລະເຊື້ອສາຍຂອງພວກເຂົາກໍຢູ່ກັບພວກເຂົາ.
[24]ກ່ອນທີ່ພວກເຂົາຈະຮ້ອງຫາ, ເຮົາຈະຕອບ; ແລະໃນຂະນະທີ່ພວກເຂົາຍັງເວົ້າຢູ່, ເຮົາຈະຟັງ.[25]ຫມາປ່າແລະລູກແກະຈະຫາກິນຢູ່ນຳກັນ,
ແລະສິງໂຕຈະກິນເຟືອງຄືກັນກັບງົວ; ແຕ່ຜົງຂີ້ດິນຈະເປັນອາຫານຂອງງູ, ພວກມັນຈະບໍ່
ທຳຮ້າຍຫລືທຳລາຍກັນອີກຕໍ່ໄປທົ່ວເທິງພູເຂົາອັນບໍລິສຸດຂອງເຮົາ, ພຣະຢາເວຊົງກ່າວດັ່ງນີ້.

66 [1]ພຣະຢາເວຊົງກ່າວດັ່ງນີ້, "ຟ້າສະຫວັນເປັນບັນລັງຂອງເຮົາ, ແລະ ແຜ່ນດິນໂລກແມ່ນບ່ອນວາງຕີນຂອງເຮົາ. ແລະ
ພຣະນິເວດທີ່ພວກເຈົ້າຈະສ້າງສຳລັບເຮົາຢູ່ໃສ? ບ່ອນທີ່ເຮົາຈະພັກຜ່ອນຢູ່ໃສ?

[2]ມືຂອງເຮົາໄດ້ສ້າງສິ່ງທັງຫມົດນີ້; ນັ້ນການທີ່ສິ່ງເຫລົ່ານີ້ໄດ້ເກີດຂຶ້ນມາ - ນີ້ແມ່ນຄຳປະກາດຂອງພຣະຢາເວ. ຄົນນີ້ແລະທີ່ເຮົາຍອມຮັບ,
ຄືຜູ້ທີ່ມີຈິດວິນຍານທີ່ແຕກສະຫລາຍແລະສຳນຶກຜິດ, ແລະຜູ້ທີ່ຕົວສັ່ນຕໍ່ຖ້ອຍຄຳຂອງເຮົາ.
[3]ຜູ້ທີ່ຂ້າງົວກໍຂ້າຄົນນຳ; ຜູ້ທີ່ຖວາຍບູຊາລູກແກະກໍຫັກຄໍຂອງຫມາດ້ວຍ; ຜູ້ທີ່ຖວາຍເມັດພືດເປັນເຄື່ອງບູຊາກໍຖວາຍເລືອດຫມູດ້ວຍ;
ຜູ້ທີ່ຖວາຍອານຸສອນເຄື່ອງຫອມກໍອວຍພອນຄວາມຊົ່ວຮ້າຍດ້ວຍ. ພວກເຂົາໄດ້ເລືອກຕາມທາງຂອງຕົນເອງ,
ແລະພວກເຂົາກໍຍິນດີໃນສິ່ງທີ່ຫນ້າກຽດຊັງຂອງພວກເຂົາ.
[4]ໃນທາງດຽວກັນເຮົາຈະເລືອກການລົງໂທດຂອງພວກເຂົາເອງ; ເຮົາຈະນຳ ເອົາສິ່ງທີ່ພວກເຂົາຢ້ານກົວມາໃຫ້ພວກເຂົາ,
ເພາະວ່າເມື່ອເຮົາເອີ້ນແລ້ວ, ບໍ່ມີໃຜຕອບ; ເມື່ອເຮົາເວົ້າແລ້ວ, ບໍ່ມີໃຜຟັງ.
ພວກເຂົາໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາແລະເລືອກທີ່ຈະເຮັດໃນສິ່ງທີ່ເຮົາບໍ່ພໍໃຈ."
[5]ຈົ່ງຟັງຖ້ອຍຄຳຂອງພຣະຢາເວ, ພວກເຈົ້າຜູ້ທີ່ຕົວສັ່ນຕໍ່ຖ້ອຍຄຳຂອງພຣະອົງ,
"ບັນດາພີ່ນ້ອງຂອງພວກເຈົ້າຜູ້ທີ່ກຽດຊັງແລະແຍກພວກເຈົ້າອອກໄປເພາະເຫັນແກ່ນາມຂອງເຮົາໄດ້ກ່າວວ່າ," ຂໍໃຫ້ພຣະຢາເວຈົ່ງໄດ້ຮັບກຽດ,
ແລ້ວພວກເຮົາຈະເຫັນຄວາມຊື່ນບານຂອງພວກເຈົ້າ, 'ແຕ່ພວກເຂົາຈະໄດ້ຮັບຄວາມອັບອາຍ.
[6]ສຽງອຶກກະທຶກຂອງການສູ້ຮົບແມ່ນອອກມາຈາກເມືອງນັ້ນ, ສຽງມາຈາກພຣະວິຫານ,
ສຽງຂອງພຣະຢາເວທີ່ກຳລັງຊົງແກ້ແຄ້ນພວກສັດຕູຂອງພຣະອົງ.
[7]ກ່ອນທີ່ນາງຈະເຈັບທ້ອງ, ນາງກໍເກີດລູກ; ກ່ອນທີ່ຄວາມເຈັບປວດຈະມາເຖິງນາງ, ນາງໄດ້ເກີດລູກຊາຍຜູ້ຫນຶ່ງ.[8]ໃຜເຄີຍໄດ້ຍິນເລື່ອງເຊັ່ນນີ້?
ຜູ້ໃດເຄີຍໄດ້ເຫັນສິ່ງດັ່ງກ່າວ? ແຜ່ນດິນຈະເກີດຂຶ້ນໃນມື້ດຽວບໍ? ປະຊາຊາດຫນຶ່ງຈະຖືກສ້າງຕັ້ງຂຶ້ນໃນເວລາດຽວໄດ້ບໍ?
ແຕ່ທັນທີທີ່ຊີໂອນເລີ່ມເຈັບທ້ອງ, ນາງກໍເກີດລູກທັງຫລາຍຂອງນາງ.
[9]ເຮົານຳເອົາເດັກນັ້ນອອກມາເມື່ອເຖິງກຳນົດເກີດແລະຈະບໍ່ຍອມໃຫ້ເດັກຄົນນັ້ນເກີດໄດ້ບໍ?
ຫລືເຮົານຳເດັກມາເຖິງເວລາທີ່ຈະເກີດແລ້ວຈະຢັບຢັ້ງໄວ້ໄດ້ບໍ? ພຣະເຈົ້າຢາເວຊົງຖາມດັ່ງນີ້. ຝ່າຍເຮົາທີ່ໃຫ້ເກີດລູກ ແລະ
ຈະປິດທ້ອງບໍ່ໃຫ້ເກີດໄດ້ບໍ? ພຣະເຈົ້າຂອງພວກເຈົ້າກ່າວດັ່ງນີ້ແຫລະ."
[10]ຈົ່ງປິຕິຍິນດີກັບເຢຣູຊາເລັມແລະຍິນດີກັບນາງ, ພວກເຈົ້າທຸກໆຄົນທີ່ຮັກແພງນາງ; ຈົ່ງປິຕິຍິນດີກັບນາງ, ພວກເຈົ້າທຸກຄົນທີ່ໄວ້ທຸກໃຫ້ກັບນາງ!
[11]ເພາະວ່າພວກເຈົ້າຈະໄດ້ຮັບລ້ຽງດູແລະອີ່ມໃຈ; ພວກເຈົ້າຈະໄດ້ຮັບການເລົ້າໂລມຢູ່ໃນອ້ອມເອິກຂອງນາງ;
ເພາະວ່າເຈົ້າຈະດື່ມສິ່ງເຫລົ່ານັ້ນໃຫ້ເຕັມທີ່ແລະຈະປິຕິຍິນດີກັບສະຫງ່າຣາສີຢ່າງມາກມາຍຂອງນາງ.
[12]ພຣະຢາເວກ່າວດັ່ງນີ້ວ່າ,“ ເຮົາຈະຂະຫຍາຍຄວາມຈະເລີນຮຸ່ງເຮືອງມາເຫນືອນາງຄືກັບແມ່ນ້ຳ,
ແລະສົບສົມບັດຂອງບັນດາປະຊາຊາດຄືກັບກະແສນ້ຳ ໄຫລ. ພວກເຈົ້າຈະໄດ້ຮັບການລ້ຽງດູຢູ່ຂ້າງນາງ ແລະຖືກອູ້ມໄວ້ໃນອ້ອມແຂນຂອງນາງ
ແລະຢຽບຢູ່ເທິງຫົວເຂົ່າຂອງນາງ.[13]ມານດາປອບໂຍນລູກຂອງຕົນສັນໃດ ເຮົາກໍປອບໂຍນພວກເຈົ້າສັນນັ້ນ
ແລະພວກເຈົ້າຈະໄດ້ຮັບການປອບໂຍນໃນກຸງເຢລູຊາເຣັມ.
[14]ພວກເຈົ້າຈະເຫັນສິ່ງນີ້, ແລະໃຈຂອງພວກເຈົ້າຈະປິຕິຍິນດີ, ແລະກະດູກຂອງພວກເຈົ້າຈະປົ່ງອອກຄືກັບຫຍ້າອ່ອນ.
ພຣະຫັດຂອງພຣະຢາເວຈະເປັນທີ່ຮູ້ຈັກແກ່ຜູ້ຮັບໃຊ້ຂອງພຣະອົງ,
ແຕ່ພຣະອົງຈະຊົງສຳແດງຄວາມໂກດຮ້າຍຂອງພຣະອົງຕໍ່ພວກສັດຕູຂອງພຣະອົງ.
[15]ເພາະເບິ່ງແມ, ພຣະຢາເວຈະສະເດັດມາດ້ວຍໄຟ, ແລະບັນດາລົດຮົບຂອງພຣະອົງຈະມາເຫມືອນລົມພາຍຸ
ເພື່ອນຳຄວາມຮ້ອນແຮງແຫ່ງຄວາມໂກດຮ້າຍຂອງພຣະອົງແລະການສັ່ງນາບຂູ່ຂອງພຣະອົງມາດ້ວຍແປວໄຟ.
[16]ເພາະວ່າພຣະຢາເວຊົງທຳການພິພາກສາມະນຸດຊາດດ້ວຍໄຟແລະດາບຂອງພຣະອົງ. ພວກຄົນທີ່ພຣະຢາເວຊົງຂ້າຈະມີຢ່າງຫລວງຫລາຍ.
[17]ພວກເຂົາໄດ້ຊຳລະຕົນເອງແລະເຮັດໃຫ້ຕົນເອງບໍລິສຸດ, ເພື່ອທີ່ພວກເຂົາຈະເຂົ້າໄປໃນສວນເຫລົ່ານັ້ນໄດ້,
ເພື່ອຕິຕາມຄົນທີ່ຢູ່ທ່າມກາງພວກຄົນທີ່ກິນຊີ້ນຫມູແລະສິ່ງທີ່ຫນ້າກຽດຊັງຄືກັບຫນູ. "ພວກເຂົາຈະມາເຖິງຈຸດຈົບ -
ນີ້ແມ່ນການປະກາດຂອງພຣະຢາເວ.
[18]ເພາະເຮົາຮູ້ຈັກການກະທຳແລະຄວາມຄິດຂອງພວກເຂົາ. ເວລານັ້ນຈະມາເຖິງເມື່ອເຮົາຈະເຕົ້າໂຮມທຸກປະຊາຊາດແລະທຸກພາສາ.
ພວກເຂົາຈະມາແລະຈະເຫັນສະຫງ່າຣາສີຂອງເຮົາ.[19]ເຮົາຈະຕັ້ງຫມາຍສຳຄັນແຫ່ງອຳນາດໄວ້ທ່າມກາງພວກເຂົາ.
ແລ້ວເຮົາຈະສົ່ງຜູ້ທີ່ລອດຊີວິດຈາກພວກເຂົາໄປຍັງບັນດາປະຊາຊາດ: ໄປຍັງທາຊິດ, ພຸດ, ແລະ ລຸດ,
ບັນດານັກທະນູແລະຄົນຍິງທະນູຂອງພວກເຂົາ, ໄປຫາ ຕູບານ ຢາວານ, ແລະໄປຍັງແຜ່ນດິນຊາຍທະເລທີ່ຫ່າງໄກ.
ທີ່ພວກເຂົາບໍ່ເຄີຍໄດ້ຍິນກ່ຽວກັບເຮົາ ຫລືໄດ້ເຫັນພຣະສະຫງ່າຣາສີຂອງເຮົາ.
ພວກເຂົາຈະປະກາດສະຫງ່າຣາສີຂອງເຮົາໃນບັນດາປະຊາຊາດ.
[20]ພວກເຂົາຈະນຳເອົາພີ່ນ້ອງຂອງເຈົ້າທຸກຄົນກັບມາຈາກປະຊາຊາດທັງຫມົດ, ມາເປັນເຄື່ອງບູຊາຖວາຍແດ່ພຣະຢາເວ.
ພວກເຂົາຈະມາໂດຍມ້າ, ແລະໂດຍລົດຮົບ, ໂດຍກວຽນ, ລົດມ້າ, ໂດຍລໍ,
ແລະໂດຍອູດທັງຫລາຍມາຍັງກຸງເຢລູຊາເລັມພູເຂົາທີ່ບໍລິສຸດຂອງເຮົາ - ພຣະຢາເວກ່າວດັ່ງນີ້. ເພາະຊົນຊາດອິດສະຣາເອນຈະນຳ
ເຄື່ອງທັນຍະບູຊາໃສ່ໃນພາສະນະທີ່ສະອາດເຂົ້າໄປໃນພຣະວິຫານຂອງພຣະຢາເວ.
[21]ເຮົາຈະເລືອກເອົາບາງຄົນໃນຄົນເຫລົ່ານີ້ມາເປັນປະໂລຫິດແລະພວກເລວີ ພຣະຢາເວໄດ້ກ່າວດັ່ງນີ້,
[22]ເພາະວ່າທ້ອງຟ້າໃຫມ່ແລະແຜ່ນດິນໂລກໃຫມ່ທີ່ເຮົາຈະສ້າງຂຶ້ນຈະດຳລົງຢູ່ຕໍ່ຫນ້າເຮົາສັນໃດ ເຊື້ອສາຍຂອງພວກເຈົ້າຈະຄົງດຳລົງຢູ່,
ແລະຊື່ຂອງພວກເຈົ້າຈະດຳລົງຢູ່ສັນນັ້ນ.[23]ຈາກເດືອນຫນຶ່ງເຖິງເດືອນຕໍ່ໄປ, ແລະຈາກວັນຊະບາໂຕຫນຶ່ງເຖິງວັນຊະບາໂຕຕໍ່ໄປ,
ປະຊາຊົນທັງຫມົດຈະມາຂາບໄຫວ້ເຮົາ, ພຣະຢາເວກ່າວດັ່ງນີ້:

 generated on Tue Jun 17 19:01:42 2025

[24]ພວກເຂົາຈະອອກໄປ ແລະ ເຫັນສົບຂອງພວກຄົນທີ່ໄດ້ກະບົດຕໍ່ເຮົາ, ເພາະວ່າຫນອນທີ່ກັດກິນພວກເຂົາມັນຈະບໍ່ຕາຍ,
ແລະໄຟທີ່ເຜົາຜານພວກເຂົາມັນຈະບໍ່ດັບ; ແລະ ມັນຈະເປັນທີ່ຫນ້າກຽດຊັງຕໍ່ມະນຸດທຸກຄົນ."

# ເຢເຣມີຢາ

1 [1]ຕໍ່ໄປນີ້ແມ່ນຄໍາເວົ້າຂອງເຢເຣມີຢາ ລູກຊາຍຮິນກີຢາ, ຜູ້ເປັນປະໂລຫິດຄົນຫນຶ່ງ ທີ່ຢູ່ເມືອງອານາໂທດ ໃນແຜ່ນດິນຂອງເຜົ່າເບັນຢາມິນ.
[2]ພຣະຄໍາຂອງພຣະຢາເວໄດ້ມາເຖິງເຢເຣມີຢາ ໃນຣາຊະການໂຢສີຢາ ລູກຊາຍຂອງກະສັດອາໂມນ,
ກະສັດແຫ່ງຢູດາໃນປີທີສິບສາມແຫ່ງການຄອງລາດຂອງພຣະອົງ.[3]ຕໍ່ມາເມື່ອເຢໂຮຢາກີມ ລູກຊາຍຂອງໂຢສີຢາ, ກະສັດແຫ່ງຢູດາ,
ຈົນເຖິງເດືອນທີຫ້າ ປີທີສິບເອັດແຫ່ງລາຊະການ ເຊເດກີຢາ, ໂອລົດຂອງໂຢສີຢາແຫ່ງຢູດາ, ເມື່ອມີການກວາດຕ້ອນປະຊານະຄອນ
ເຢຣູຊາເລັມໄປເປັນຊະເລີຍ.

[4]ພຣະຄໍາຂອງພຣະຢາເວຊົງກ່າວຕໍ່ຂ້າພະເຈົ້າວ່າ,[5]"ກ່ອນເຮົາໄດ້ເປັນຮ່າງຕົວຕົນຂອງເຈົ້າຂຶ້ນໃນທ້ອງແມ່, ເຮົາໄດ້ເລືອກເຈົ້າ;
ກ່ອນເຈົ້າເກີດຈາກທ້ອງແມ່ ເຮົາກໍໄດ້ແຕ່ງຕັ້ງເຈົ້າໄວ້;
ແລະເຮົາໄດ້ສະຖາປະນາໃຫ້ເຈົ້າເປັນຜູ້ປະກາດພຣະຄໍາແກ່ບັນດາປະຊາຊາດ."[6]ແລ້ວຂ້າພະເຈົ້າໄດ້ທູນຕອບວ່າ, "ເບິ່ງເຖີດ,
ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ! ຂ້ານ້ອຍບໍ່ຮູ້ວ່າຈະເວົ້າຢ່າງໃດ, ເພາະຂ້ານ້ອຍຍັງນ້ອຍເກີນໄປ."
[7]ແຕ່ພຣະຢາເວຊົງບອກຂ້າພະເຈົ້າວ່າ, "ຢ່າເວົ້າວ່າ, 'ເຈົ້າຍັງນ້ອຍເກີນໄປ.' ເພາະເຈົ້າຈະຕ້ອງໄປຫາປະຊາຊົນທຸກແຫ່ງທີ່ເຮົາໃຊ້ເຈົ້າໄປ,
ແລະເຈົ້າຈະຕ້ອງບອກທຸກສິ່ງທີ່ເຮົາສັ່ງເຈົ້າ![8]ຢ່າຢ້ານຄົນເຫລົ່ານັ້ນ, ເພາະເຮົາຈະຢູ່ກັບເຈົ້າເພື່ອຊ່ວຍກູ້ເຈົ້າ—
ນີ້ເປັນຄໍາປະກາດຂອງພຣະຢາເວ."
[9]ແລ້ວ ພຣະຢາເວໄດ້ຊົງເດ່ພຣະຫັດ, ມາໃສ່ປາກຂ້າພະເຈົ້າ, ແລະໄດ້ຊົງກ່າວຕໍ່ຂ້າພະເຈົ້າວ່າ, "ເບິ່ງແມ,
ເຮົາໄດ້ເອົາຖ້ອຍຄໍາເວົ້ຂອງເຮົາໃສ່ໃນປາກຂອງເຈົ້າ.[10]ໃນມື້ນີ້ເຮົາໄດ້ແຕ່ງຕັ້ງເຈົ້າມີອໍານາດເຫນືອປະຊາຊົນ ແລະ
ເຫນືອຣາຊະອານາຈັກທັງຫລາຍ, ເພື່ອໃຫ້ຖອນຮາກ ແລະຮື້ຖິ້ມເສຍ, ໃຫ້ທໍາລາຍ ແລະໃຫ້ລົ້ມລົງ, ໃຫ້ສ້າງຂຶ້ນ ແລະໃຫ້ປູກ."
[11]ພຣະຄໍາຂອງພຣະຢາເວຊົງກ່າວຊົງກ່າວຕໍ່ຂ້າພະເຈົ້າວ່າ, "ເຢເຣມີຢາເອີຍ ເຈົ້າໄດ້ເຫັນຫຍັງ?" ຂ້າພະເຈົ້າໄດ້ທູນຕອບວ່າ,
"ຂ້ານ້ອຍໄດ້ເຫັນງ່າຂອງຕົ້ນຫມາກບົກ."[12]ແລ້ວພຣະຢາເວຊົງບອກຂ້າພະເຈົ້າວ່າ, "ເຈົ້າເຫັນຖືກແລ້ວ,
ເພາະເຮົາກໍາລັງເຝົ້າເບິ່ງຖ້ອຍຄໍາຂອງເຮົາເພື່ອໃຫ້ນໍາໄປປະຕິບັດໃຫ້ສໍາເລັດ."
[13]ພຣະຄໍາຂອງພຣະຢາເວໄດ້ມາເຖິງຂ້າພະເຈົ້າຄັ້ງທີສອງ, ຊົງກ່າວອີກວ່າ, "ເຈົ້າເຫັນຫຍັງ?" ຂ້າພະເຈົ້າໄດ້ທູນຕອບວ່າ,
"ຂ້ານ້ອຍໄດ້ເຫັນຫມໍ້ຫນ່ວຍຫນຶ່ງ, ມັນກໍາລັງຟົດເດືອດ, ປາກຫມໍ້ນັ້ນປິ່ນມາຈາກທາງທິດເຫນືອ."[14]ແລ້ວພຣະອົງຊົງກ່າວຕໍ່ຂ້າພະເຈົ້າວ່າ,
"ເຫດຮ້າຍຈະປະທຸຂຶ້ນຈາກທາງທິດເຫນືອ ມາເຫນືອຄົນທັງປວງທີ່ອາໄສຢູ່ໃນແຜ່ນດິນນີ້.
[15]ເພາະເຮົາກໍາລັງເອີ້ນທຸກຕະກູນແຫ່ງຣາຊະອານາຈັກທິດເຫນືອ, ພຣະຢາເວໄດ້ຊົງປະກາດດັ່ງນີ້ແຫລະ. ພວກເຂົາກໍຈະມາ,
ແລະຕ່າງກໍຈະຕັ້ງກອງທັບບັນຊາການຂອງຕົນໄວ້ຕໍ່ຫນ້າປະຕູນະຄອນເຢຣູຊາເລັມ, ຕໍ່ສູ້ກັບກໍາແພງທີ່ອ້ອມຮອບ,
ແລະຕໍ່ສູ້ກັບເມືອງອື່ນໆຂອງຢູດາ.[16]ເຮົາຈະກ່າວຄໍາພິພາກສາຂອງເຮົາຕໍ່ຄົນທັງຫລາຍໃນເມືອງເຫລົ່ານັ້ນ
ດ້ວຍວ່າພວກເຂົາໄດ້ເຮັດຄວາມຊົ່ວຮ້າຍ ຄືໄດ້ປະຖິ້ມເຮົາ, ແລະໄດ້ເຜົາເຄື່ອງຫອມບູຊາຖວາຍແກ່ພະອື່ນ,
ແລະໄດ້ນະມັດສະການສິ່ງທີ່ມືຂອງພວກເຂົາສ້າງຂຶ້ນເອງ.
[17]ຈົ່ງຕຽມຕົວເຈົ້າໃຫ້ພ້ອມ! ຈົ່ງລຸກຂຶ້ນໄປບອກແກ່ພວກເຂົາທຸກສິ່ງທີ່ເຮົາສັ່ງເຈົ້ານັ້ນ. ຢ່າຕົກໃຈຢ້ານພວກເຂົາ,
ບໍ່ດັ່ງນັ້ນເຮົາຈະເຮັດໃຫ້ເຈົ້າຢ້ານກົວຕໍ່ຫນ້າພວກເຂົາ![18]ເບິ່ງເຖີດ! ມື້ນີ້ເຮົາເຮັດໃຫ້ເຈົ້າເປັນເມືອງມີປ້ອມເປັນເສົາເຫລັກ
ແລະກໍາແພງທັງຫລາຍເປັນທອງແດງ, ເພື່ອຈະຕໍ່ສູ້ແຜ່ນດິນທັງຫມົດແລະ—ສູ້ກັບກະສັດຂອງຊາວຢູດາ, ສູ້ກັບຂ້າລາຊະການ,
ສູ້ກັບບັນດາປະໂລຫິດ, ແລະສູ້ກັບປະຊາຊົນໃນແຜ່ນດິນ.[19]ພວກເຂົາຈະຕໍ່ສູ້ກັບເຈົ້າ, ແຕ່ຈະບໍ່ຊະນະເຈົ້າ, ເພາະເຮົາຈະຢູ່ກັບເຈົ້າ
ເພື່ອຊ່ວຍກູ້ເຈົ້າໄວ້—ນີ້ເປັນຄໍາປະກາດຂອງພຣະຢາເວ."

 generated on Tue Jun 17 19:01:42 2025

2 [1]ພຣະຄຳຂອງພຣະຢາເວໄດ້ມາເຖິງຂ້າພະເຈົ້າວ່າ,[2]"ຈົ່ງໄປ ແລະປະກາດໃຫ້ນະຄອນເຢຣູຊາເລັມໄດ້ຍິນ. ດັ່ງນີ້ວ່າ,
'ພຣະຢາເວກ່າວດັ່ງນີ້ວ່າ: ເຮົາຍັງລະນຶກເຖິງຄວາມສັດຊື່ໃນພັນທະສັນຍາ ຄາວເມື່ອເຈົ້າຍັງຫນຸ່ມຂອງເຈົ້າໄດ້,
ຄວາມຮັກທີ່ເຈົ້າມີຕໍ່ເຮົາຕອນເຈົ້າຫມັ້ນ, ເມື່ອເຈົ້າໄດ້ຕິດຕາມເຮົາໃນຖິ່ນແຫ້ງແລ້ງກັນດານ, ໃນແຜ່ນດິນທີ່ບໍ່ໄດ້ປູກຝັງ.
[3]ອິດສະຣາເອນນັ້ນບໍລິສຸດຕໍ່ພຣະຢາເວ, ຄືເປັນຫມາກຜົນຮຸ່ນທຳອິດຈາກການເກັບກ່ຽວຂອງພຣະອົງ! ທຸກຄົນທີ່ໄດ້ກິນຜົນນັ້ນກໍມີຄວາມຜິດ;
ຄວາມພິນາດຈຶ່ງໄດ້ມາເຖິງພວກເຂົາ—ນີ້ເປັນຄຳປະກາດຂອງພຣະຢາເວ.'"

[4]ຈົ່ງຟັງຖ້ອຍຄຳຂອງພຣະຢາເວ, ເຊື້ອສາຍຂອງຢາໂຄບ ແລະ ທຸກຕະກູນໃນບັນດາເຊື້ອສາຍອິດສະຣາເອນ.[5]ພຣະຢາເວຊົງກ່າວວ່າ,
"ບັນພະບູລຸດຂອງພວກເຈົ້າ ເຫັນວ່າເຮົາໄດ້ເຮັດຜິດຫຍັງ, ພວກເຂົາຈຶ່ງໄດ້ພາກັນຫນີຈາກເຮົາ?
ທີ່ພວກເຂົາໄດ້ນັບຖືຮູບເຄົາລົບອັນບໍ່ມີປະໂຫຍດ ແລະ ພວກເຂົາໄດ້ກາຍເປັນສິ່ງບໍ່ມີປະໂຫຍດເອງຊ້ຳ?[6]ພວກເຂົາກໍບໍ່ໄດ້ກ່າວວ່າ,
'ພຣະຢາເວຊົງຢູ່ໃສ, ຜູ້ໄດ້ຊົງຊ່ວຍພວກເຂົາໃຫ້ອອກຈາກປະເທດເອຢິບ? ພຣະຢາເວຢູ່ໃສຜູ້ໄດ້ຊົງນຳພວກເຮົາຜ່ານຖິ່ນແຫ້ງແລ້ງກັນດານ,
ເຂົ້າສູ່ດິນແດນອາຣາບາ ແລະ ຂຸມເຫວທັງຫລາຍ, ໃນດິນແດນແຫ້ງແລ້ວ ແລະ ມືດທຶບ, ໃນແຜ່ນດິນທີ່ບໍ່ມີຄົນຜ່ານໄປ
ແລະບໍ່ມີມະນຸດອາໄສຢູ່ທີ່ນັ້ນ?'.
[7]ແຕ່ເຮົາໄດ້ນຳພວກເຂົາເຂົ້າມາໃນດິນແດນທີ່ອຸດົມສົມບູນ, ເພື່ອກິນຜົນລະປູກ ແລະ ບັນດາສິ່ງທີ່ດີ! ແຕ່ພວກເຈົ້າໄດ້ເຂົ້າ
ພວກເຈົ້າໄດ້ເຮັດໃຫ້ແຜ່ນດິນຂອງເຮົາເປັນມົນທິນ, ແລະເຮັດໃຫ້ມໍຣະດົກຂອງເຮົາເປັນສິ່ງນ່າລັງກຽດ![8]ພວກປະໂລຫິດບໍ່ໄດ້ກ່າວວ່າ,
'ພຣະຢາເວຊົງຢູ່ທີ່ໃດ?' ແລະຄົນເຫລົ່ານັ້ນທີ່ຊ່ຽວຊານເລື່ອງທຳມະບັນຍັດກໍບໍ່ໄດ້ໃສ່ໃຈເຮົາ! ບັນດາຜູ້ປົກຄອງກໍເປັນກະບົດຕໍ່ສູ້ເຮົາ.
ຜູ້ປະກາດພຣະທັມກໍປະກາດໃນນາມຂອງພະບາອານ ແລະ ຕິດຕາມສິ່ງທີ່ບໍ່ມີປະໂຫຍດ.
[9]ດ້ວຍເຫດນີ້ ເຮົາຈຶ່ງຍັງຄົງໂຕ້ແຍ້ງກັບເຈົ້າ—ນີ້ເປັນຄຳປະກາດຂອງພຣະຢາເວ—ແລະເຮົາຈະກ່າວໂທດບັນດາລູກຫລານຂອງເຈົ້າ.[10]ດັ່ງນັ້ນ
ຈົ່ງຂ້າມໄປຕາມລຽບຝັ່ງຂອງກິດຕິມແລະເບິ່ງ. ຫລືສົ່ງຄົນໄປທີ່ເມືອງເກດາ ແລະ ພິຈາລະນາເບິ່ງຖີ່ຖ້ວນ
ແລະເບິ່ງວ່າເຄີຍມີເຫມືອນຢ່າງນີ້ແດ່ບໍ?[11]ມີຊົນຊາດໃດແດ່ເຄີຍປ່ຽນພະທັງຫລາຍຂອງຕົນ, ເຖິງແມ່ນວ່າພະເຫລົ່ານັ້ນບໍ່ແມ່ນພະກໍດີ?
ແຕ່ໄພ່ພົນຂອງເຮົາໄດ້ເອົາສັກສີຂອງເຮົາ ແລກກັບສິ່ງບໍ່ສາມາດຊ່ວຍເຫລືອພວກເຂົາ.
[12]ທ້ອງຟ້າທັງຫລາຍ, ຈົ່ງສັ່ນສະທ້ານ, ເພາະດ້ວຍສິ່ງນີ້! ຈົ່ງຕື່ນຕົກໃຈ ແລະຈົ່ງເປົ່າຮ້າງ—ນີ້ເປັນຄຳປະກາດຂອງພຣະຢາເວ.
[13]ເພາະວ່າໄພ່ພົນຂອງເຮົາໄດ້ເຮັດຄວາມຊົ່ວຮ້າຍສອງຢ່າງຄື: ພວກເຂົາໄດ້ປະຖິ້ມເຮົາຜູ້ເປັນບໍ່ນ້ຳທີ່ມີຊີວິດ,
ແລະພວກເຂົາໄດ້ຂຸດນ້ຳສ້າງສຳລັບຕົນເອງ, ແຕ່ເປັນນ້ຳສ້າງທີ່ແຕກຂັງນ້ຳບໍ່ໄດ້.
[14]“ອິດສະຣາເອນບໍ່ໄດ້ເປັນຂ້າທາດຫລື? ເຂົາເປັນທາດທີ່ເກີດມາໃນເຮືອນຂອງນາຍຂອງເຂົາບໍ່ແມ່ນຫລື? ດັ່ງນັ້ນເປັນຫຍັງເຂົາຈຶ່ງເປັນຂອງປຸ້ນ?
[15]ບັນດາສິງຫນຸ່ມໄດ້ຮ້ອງແຜດສຽງໃສ່ເຂົາ. ພວກມັນໄດ້ແຜດສຽງດັງຫລາຍ ແລະພວກມັນໄດ້ເຮັດໃຫ້ແຜ່ນດິນຂອງເຂົາຮ້າງເປົ່າ.
ເມືອງທັງຫລາຍຂອງພວກເຂົາກໍຖືກທຳລາຍບໍ່ມີຄົນອາໄສຢູ່.[16]ຍິ່ງໄປກວ່ານັ້ນ, ຊາວເມືອງເມັມຟິດ ແລະເມືອງຕະປັນເຂດ
ໄດ້ໂກນຫົວກະມ່ອມຂອງເຈົ້າແລ້ວ.[17]ພວກເຈົ້າຫາເລື່ອງເຫລົ່ານີ້ມາໃສ່ຕົວເຈົ້າເອງບໍ່ແມ່ນຫລື ໂດຍການປະຖິ້ມພຣະຢາເວຂອງເຈົ້າ,
ເມື່ອພຣະອົງນຳເຈົ້າໄປຕາມທາງ?
[18]ດັ່ງນັ້ນເຈົ້າໄດ້ອັນໃດຈາກການທີ່ລົງໄປປະເທດເອຢິບ ເພື່ອຈະດື່ມນ້ຳໃນແມ່ນ້ຳນິນບໍ? ຫລືເຈົ້າໄດ້ອັນໃດຈາກການລົງໄປທີ່ໄປປະເທດອັດຊີເຣຍ
ແລະດື່ມນ້ຳໃນແມ່ນ້ຳເອຟຣາດບໍ?[19]ຄວາມຊົ່ວຊ້າຂອງເຈົ້າຈະຕີສອນເຈົ້າເອງ, ແລະຄວາມບໍ່ສັດຊື່ຂອງເຈົ້າຈະຕຳຫນິເຈົ້າ.
ເພາະສະນັ້ນເຈົ້າຈົ່ງຄິດເຖິງມັນ ແລະ ເຂົ້າໃຈເຖິດວ່າມັນເປັນຄວາມຊົ່ວ ແລະຄວາມຂົມຂື່ນ ເມື່ອເຈົ້າປະຖິ້ມພຣະຢາເວ
ພຣະເຈົ້າຂອງພວກເຈົ້າ, ແລະບໍ່ຢ້ານກົວເຮົາອີກຕໍ່ໄປເລີຍ—ນີ້ແມ່ນພຣະຄຳຂອງພຣະເຢເວຜູ້ຊົງເປັນພຣະເຈົ້າຈອມໂຍທາ.
[20]ເພາະເຮົາໄດ້ຫັກແອກຂອງເຈົ້າທີ່ມີເຫິງນານແລ້ວນັ້ນ; ເຮົາໄດ້ທຳລາຍໂຊ່ທີ່ຖ່ວງດຶງເຈົ້າບໍ່. ເຈົ້າຍັງໄດ້ກ່າວວ່າ,
'ຂ້າພະເຈົ້າຈະບໍ່ຮັບໃຊ້ພຣະອົງ' ເພາະເຈົ້າໄດ້ກົ້ມຂາບໄຫວ້ເທິງເນີນພູສູງທຸກແຫ່ງ ແລະກ້ອງຕົ້ນໄມ້ບ່ອນສັກສິດ,
ພວກເຈົ້າໄດ້ເຮັດປະຫມາດເຫມືອນຍິງໂສເພນີ.[21]ເຮົາໄດ້ປູກເຈົ້າໄວ້ເຫມືອນກັບຕົ້ນອະງຸ່ນພັນດີ, ເຫມືອນແນວພືດຢ່າງດີທີ່ສຸດ.
ແຕ່ແລ້ວເປັນຫຍັງເຈົ້າຈຶ່ງກາຍເປັນເຫມືອນອະງຸ່ນພັນຕໍ່າບໍ່ມີຄ່າ?[22]ເຖິງແມ່ນເຈົ້າຈະລ້າງຕົວຂອງເຈົ້າດ້ວຍນ້ຳຢາ ແລະໃສ່ສະບູຫລາຍໆ,
ແຕ່ຮອຍຄວາມເປິເປື້ອນຈາກຄວາມຜິດບາບຂອງເຈົ້າກໍຍັງປະກົດຢູ່ຕໍ່ຫນ້າເຮົາ—ນີ້ແມ່ນພຣະຄຳຂອງພຣະເຢເວຜູ້ຊົງເປັນພຣະເຈົ້າຈອມໂຍທາ.
[23]ເຈົ້າຈະເວົ້າໄດ້ຢ່າງໃດວ່າ, 'ຂ້ານ້ອຍບໍ່ໄດ້ເຮັດຜິດ! ເວົ້າວ່າບໍ່ເຄີຍຂາບໄຫວ້ພະບາອານ'? ຈົ່ງເບິ່ງທ່າທາງຂອງເຈົ້າໃນຮ່ອມພູເບິ່ງດຸ!
ຈົ່ງສຳນຶກວ່າເຈົ້າໄດ້ເຮັດບາບຫຍັງແດ່—ເຈົ້າເປັນເຫມືອນອູດສາວທີ່ກຳລັງຄຶກຄະນອງຢູ່ບໍ່ເປັນສຸກ,
[24]ເຫມືອນລໍປ່າທີ່ຄຸ້ນເຄີຍກັບຖິ່ນແຫ້ງແລ້ງກັນດານ, ໄດ້ສູດລົມຫາຍໃຈດ້ວຍຄວາມຢາກຖືເຊີງຢ່າງຮຸນແຮງຂອງພວກມັນ!
ໃຜຈະລະງັບຄວາມຕ້ອງການຂອງມັນໄດ້? ລໍເຖິກກໍບໍ່ຈຳເປັນຕ້ອງແຕ່ງຕົວງາມແລ້ວໄລ່ຕາມນາງ ໃນລະດູຕິດເຊີງ;
ລໍແມ່ຈະປະກົດໃຫ້ເຫັນເລື້ອຍ.[25]ເຈົ້າຈົ່ງຫ້າມຕີນຂອງເຈົ້າ ຢ່າແລ່ນຈົນເກີບເຣ່ຍ ແລະ ຄໍແຫ້ງ! ແຕ່ເຈົ້າໄດ້ເວົ້າວ່າ, ‘ບໍ່ເປັນຫຍັງດອກ!
ເພາະຂ້າຮັກຄົນແປກຫນ້າ ແລະຂ້າພະເຈົ້າຈະຕິດຕາມໄປ!’
[26]ເມື່ອຂີ້ລັກນັ້ນຖືກຈັບຍ່ອມລະອາຍສັນໃດ, ເຊື້ອສາຍຂອງອິດສະຣາເອນກໍຈະລະອາຍສັນນັ້ນ—ທັງຕົວເຂົາ, ກະສັດ, ເຈົ້ານາຍ, ປະໂລຫິດ,
ແລະຜູ້ປະກາດພຣະທັມຂອງເຂົາ.[27]ຄົນເຫລົ່ານີ້ ທີ່ເວົ້າກັບຕົ້ນໄມ້ວ່າ, ‘ທ່ານເປັນພໍ່ຂອງຂ້ານ້ອຍ,’ ແລະເວົ້າກັບກ້ອນຫີນວ່າ,
‘ທ່ານເປັນຜູ້ໃຫ້ກຳເນີດຂອງຂ້ານ້ອຍ.’ ຍ້ອນເຈົ້າປະຖິ້ມເຮົາ ແລະ ບໍ່ຕ່າວມາຫາເຮົາ. ແຕ່ເມື່ອເຈົ້າຕົກທຸກໄດ້ຍາກ ພວກເຈົ້າກ່າວວ່າ,
'ຂໍຊົງລຸກຂຶ້ນຊ່ວຍພວກຂ້ານ້ອຍທັງຫລາຍໃຫ້ພົ້ນແດ່ທ້ອນ.’[28]ແລ້ວບັນດາພະຂອງເຈົ້ານັ້ນຢູ່ໃສ ຊຶ່ງເປັນພະທີ່ເຈົ້າສ້າງໄວ້ສຳລັບຕົວເອງ?
ຖ້າມັນຊ່ວຍເຈົ້າໃຫ້ພົ້ນໄດ້ ກໍຈົ່ງໃຫ້ມັນຊ່ວຍຕີ, ເມື່ອເຖິງເວລາຕົກທຸກໄດ້ຍາກຂອງເຈົ້າ, ຊາວຢູດາເອີຍ ພວກເຈົ້າເມືອງຕ່າງໆຫລາຍເທົ່າໃດ
ເຈົ້າກໍມີພະຫລາຍທໍ່ນັ້ນ!
[29]ເຈົ້າທັງຫລາຍຈະມາໂຕ້ແຍ້ງເຮົາເຮັດຫຍັງ? ເຈົ້າໄດ້ກະບົດຕໍ່ສູ້ເຮົາຫມົດທຸກຄົນແລ້ວ—ນີ້ເປັນຄຳປະກາດຂອງພຣະຢາເວ.
[30]ເຮົາໄດ້ລົງໂທດຕີລູກຫລານຂອງພວກເຈົ້າ. ພວກເຂົາບໍ່ຍອມຮັບເອົາການດັດສ້າງນັ້ນ.
ດາບຂອງເຈົ້າເອງໄດ້ຂ້າຜູ້ປະກາດພຣະທັມຂອງຕົນເຫມືອນສິງໂຕຮ້າຍກາດ![31]ຄົນຍຸກນີ້ເອີຍ,
ພວກເຈົ້າທັງຫມົດຈົ່ງຕັ້ງໃຈພຣະຄຳຂອງພຣະຢາເວ! ເຮົາເປັນເຫມືອນຖິ່ນແຫ້ງແລ້ງກັນດານແກ່ອິດສະຣາເອນຫລື?

ຫລືເຫມືອນແຜ່ນດິນທີ່ເປັນມືດທຶບບໍ? ເປັນຫຍັງໄພ່ພົນຂອງເຮົາຈຶ່ງກ່າວວ່າ, ‘ພວກຂ້ານ້ອຍທັງຫລາຍເປັນອິດສະຫລະ,
ຂ້າພະອົງຈະບໍ່ມາຫາພຣະອົງອີກ'?
[32]ສາວປອດຈະລືມເຄື່ອງເອ້ຂອງຕົນໄດ້ບໍ, ເຈົ້າສາວຈະລືມເຄື່ອງແຕ່ງຕົວຂອງຕົນໄດ້ບໍ?
ແຕ່ໄພ່ພົນຂອງເຮົາໄດ້ລືມເຮົາເປັນຈຳນວນວັນທີ່ນັບບໍ່ຖ້ວນ![33]ພວກເຈົ້າຮູ້ຈັກວິທີຍົວະເຍົ້າໃຫ້ຄົນມາຫລົງຮັກໄດ້ຢ່າງແນບນຽນ.
ອີກທັງພວກເຈົ້າຍັງສອນວິທີຂອງພວກເຈົ້າໃຫ້ຍິງຊົ່ວ.[34]ເສື້ອຂອງພວກເຈົ້າໄດ້ເປິເປື້ອນດ້ວຍເລືອດ ຂອງຄົນທຸກຍາກທີ່ບໍ່ມີຄວາມຜິດຕິດຢູ່,
ພວກເຈົ້າໄດ້ຈັບຄົນທີ່ບໍ່ເຄີຍລັກ ຂອງໃນເຮືອນພວກເຈົ້າ.
[35]ແຕ່ເຖິງຈະມີເລື່ອງຕ່າງໆເຫລົ່ານີ້ ພວກເຈົ້າກໍຍັງເວົ້າວ່າ, ‘ຂ້າພະເຈົ້າບໍ່ມີຄວາມຜິດເລີຍ; ແລະເວົ້າວ່າ
ພຣະອົງບໍ່ຄຽດຮ້າຍຂ້າພະເຈົ້າອີກແລ້ວ.’ ເບິ່ງແມ! ເຮົາພຣະຢາເວຈະນຳພວກເຈົ້າສູ່ການພິພາກສາ ຍ້ອນພວກເຈົ້າເວົ້າວ່າ,
‘ຂ້າພະເຈົ້າບໍ່ໄດ້ເຮັດບາບ.’[36]ດ້ວຍເຫດໃດພວກເຈົ້າຈຶ່ງຫັນເຫປ່ຽນເສັ້ນທາງຂອງພວກເຈົ້າ? ເອຢິບຈະເຮັດໃຫ້ເຈົ້າອັບອາຍ,
ເຫມືອນດັ່ງອັດຊີເຣຍເຄີຍເຮັດໃຫ້ເຈົ້າອັບອາຍມາແລ້ວນັ້ນ.[37]ເຊັ່ນດຽວກັນກັບພວກເຈົ້າຈະໄດ້ອອກໄປຈາກທີ່ນັ້ນ
ໂດຍເອົາມາກຸມຫົວຂອງເຈົ້າໄວ້, ເພາະພຣະຢາເວຊົງປະຖິ້ມບັນດາຄົນເຫລົ່ານັ້ນ ທີ່ເຈົ້າໄວ້ວາງໃຈ,
ພວກເຈົ້າຈະຈະເລີນຂຶ້ນຍ້ອນຄວາມຊ່ວຍເຫລືອຈາກພວກເຂົາ.”

 generated on Tue Jun 17 19:01:42 2025

3 [1]“ຖ້າຜູ້ຊາຍຄົນໃດປະຮ້າງເມຍຂອງຕົນ ແລະນາງກໍໄປຈາກລາວເສຍ ແລະໄປເປັນເມຍຂອງຊາຍອີກຄົນຫນຶ່ງ, ລາວຈະກັບໄປຫານາງບໍ?
ແຜ່ນດິນນັ້ນຈະບໍ່ເປິເປື້ອນຫລວງຫລາຍບໍ?’ ພວກເຈົ້າໄດ້ໃຊ້ຊີວິດເຫມືອນຍິງໂສເພນີທີ່ຫລິ້ນຊູ້ກັບຄົນຮັກຫລາຍຄົນແລ້ວ;
ແລ້ວເຈົ້າຈະກັບມາຫາເຮົາອີກຫລື?”—ນີ້ເປັນຄຳປະກາດຂອງພຣະຢາເວ.[2]ຈົ່ງແຫງນຫນ້າຂຶ້ນສູ່ບັນດາບ່ອນທີ່ສູງນັ້ນ ແລະເບິ່ງແມ!
ມີບ່ອນໃດແດ່ທີ່ພວກເຈົ້າມີເພດສຳພັນນອກສົມຣົດ? ພວກເຈົ້າໄດ້ນັ່ງຄອຍຖ້າຄົນຮັກຂອງເຈົ້າຢູ່ທີ່ແຄມທາງ,
ເຫມືອນຄົນອາຫລັບໃນຖິ່ນແຫ້ງແລ້ງກັນດານ. ພວກເຈົ້າໄດ້ເຮັດໃຫ້ແຜ່ນດິນເປິເປື້ອນ ດ້ວຍການເປັນໂສເພນີ ແລະຄວາມຊົ່ວຊ້າຂອງພວກເຈົ້າ.

[3]ເພາະສະນັ້ນ ຝົນຈຶ່ງໄດ້ຖືກລະງັບເສຍ ແລະຝົນປາຍລະດູຈຶ່ງຂາດໄປ. ແຕ່ພວກເຈົ້າມີຫນ້າທີ່ຍິ່ງຍະໂສ, ເຫມືອນກັບຜູ້ຍິງບໍ່ສັດຊື່.
ພວກເຈົ້າປະຕິເສດທີ່ຈະຮູ້ສຶກລະອາຍ.[4]ພວກເຈົ້າຫາກໍຈະຮ້ອງເຮົາບໍ່ແມ່ນຫລືວ່າ, ‘ພຣະບິດາຂອງຂ້ານ້ອຍ!
ພຣະອົງຊົງເປັນສະຫາຍຕັ້ງແຕ່ຂ້າພະເຈົ້າຍັງຫນຸ່ມຂອງຂ້າພະເຈົ້າ![5]ພຣະອົງຈະຊົງມີຄວາມໂກດຮ້າຍຢູ່ເປັນນິດບໍ?
ພຣະອົງຈະຊົງໂກດຮ້າຍຢູ່ຈົນເຖິງທີ່ສຸດປາຍບໍ?’ ເບິ່ງແມ! ພວກເຈົ້າອອກຄຳເວົ້າແລ້ວ, ແຕ່ພວກເຈົ້າກໍຍັງເຮັດຄວາມຊົ່ວຊ້າທຸກຢ່າງ
ຊຶ່ງພວກເຈົ້າເຮັດໄດ້!”
[6]ແລ້ວພຣະຢາເວໄດ້ກ່າວກັບຂ້າພະເຈົ້າໃນລາຊະການຂອງກະສັດໂຢສີຢາວ່າ, “ເຈົ້າເຫັນອິດສະຣາເອນຜູ້ບໍ່ສັດຊື່ເຮັດຫຍັງ?
ນາງຂຶ້ນໄປເທິງພູເຂົາສູງທຸກຫນ່ວຍ ແລະ ກ້ອງຕົ້ນໄມ້ຂຽວສົດທຸກຕົ້ນ, ແລ້ວບ່ອນນັ້ນນາງກໍປະພຶດເຫມືອນກັບຍິງໂສເພນີ.[7]ເຮົາໄດ້ກ່າວວ່າ,
‘ຫລັງຈາກທີ່ນາງເຮັດທຸກສິ່ງເຫລົ່ານີ້ແລ້ວ, ນາງຈະກັບມາຫາເຮົາ,’ ແຕ່ນາງກໍບໍ່ກັບມາ. ແລ້ວຢູດານ້ອງສາວທີ່ທໍລະຍົດນັ້ນກໍໄດ້ເຫັນສິ່ງເຫລົ່ານີ້.
[8]ດັ່ງນັ້ນເຮົາເຫັນວ່າ, ໃນທຳນອງດຽວກັນທີ່ອິດສະຣາເອນຜູ້ບໍ່ສັດຊື່ ໄດ້ລ່ວງປະເວນີ ແລະເຮົາໄດ້ໄລ່ນາງໄປ ພ້ອມກັບໃຫ້ຫນັງສືຢ່າຮ້າງ,
ຢູດານ້ອງສາວທີ່ທໍລະຍົດຂອງນາງກໍບໍ່ຢ້ານກົວເລີຍ; ນາງກໍກັບໄປເຮັດຕົວເອງເປັນໂສເພນີດ້ວຍເຊັ່ນດຽວກັນ.
[9]ເພາະເຫັນວ່າການໄດ້ໄປເປັນໂສເພນີຂອງນາງຍັງຖືເປັນເລື່ອງເລັກນ້ອຍ; ນາງກໍໄດ້ເຮັດໃຫ້ແຜ່ນດິນເປິເປື້ອນໄປ,
ແລະນາງໄດ້ໄປລ່ວງປະເວນີກັບກ້ອນຫີນ ແລະຕົ້ນໄມ້.[10]ແລ້ວພາຍຫລັງນາງເຮັດໄປທັງຫມົດເຊັ່ນນີ້ແລ້ວ,
ຢູດານ້ອງສາວທີ່ທໍລະຍົດຂອງນາງກໍໄດ້ຫັນກັບມາຫາເຮົາ, ແຕ່ບໍ່ໄດ້ດ້ວຍສິ້ນສຸດໃຈ, ແຕ່ທຳທ່າເຮັດເປັນກັບມາ,”—
ນີ້ເປັນຄຳປະກາດຂອງພຣະຢາເວ.
[11]ແລ້ວພຣະຢາເວໄດ້ກ່າວກັບຂ້າພະເຈົ້າວ່າ, “ອິດສະຣາເອນຜູ້ບໍ່ສັດຊື່ຍັງສະແດງຕົວວ່າຊອບທຳຍິ່ງກວ່າຢູດາທີ່ທໍລະຍົດ![12]ຈົ່ງໄປ
ແລະປະກາດຖ້ອຍຄຳເຫລົ່ານີ້ ທາງທິດເຫນືອ. ກ່າວວ່າ, ‘ອິດສະຣາເອນຜູ້ບໍ່ສັດຊື່ເອີຍ, ຈົ່ງກັບມາເຖີດ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເຮົາຈະບໍ່ໃຫ້ຄວາມຮ້າຍຂອງເຮົາຢູ່ເຫນືອພວກເຈົ້າ. ເພາະເຮົາມີຄວາມສັດຊື່—ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະບໍ່ຮ້າຍເປັນນິດ.
[13]ພຽງແຕ່ຍອມຮັບຄວາມຜິດຂອງພວກເຈົ້າວ່າ, ພວກເຈົ້າໄດ້ລະເມີດຕໍ່ພຣະຢາເວ ພຣະເຈົ້າຂອງພວກເຈົ້າ;
ພວກເຈົ້າໄດ້ແບ່ງໃຈກັບບັນດາຄົນແປກຫນ້າທີ່ກ້ອງຕົ້ນໄມ້ຂຽວສົດທຸກຕົ້ນ! ເພາະພວກເຈົ້າບໍ່ໄດ້ເຊື່ອຟັງສຽງຂອງເຮົາ!—
ນີ້ເປັນຄຳປະກາດຂອງພຣະຢາເວ.[14]ຈົ່ງກັບມາເຖີດ, ໄພ່ພົນທີ່ບໍ່ສັດຊື່ທັງຫລາຍເອີຍ!—ນີ້ເປັນຄຳປະກາດຂອງພຣະຢາເວ—
ເຮົາເປັນສາມີຂອງພວກເຈົ້າ! ເຮົາຈະຮັບພວກເຈົ້າຈາກເມືອງລະຄົນ, ແລະຈາກຕະກູນລະສອງຄົນ, ແລະເຮົາຈະນຳພວກເຈົ້າມາເຖິງຊີໂອນ!
[15]ເຮົາຈະໃຫ້ຜູ້ລ້ຽງແກະຄົນທີ່ເຮົາພໍໃຈແກ່ພວກເຈົ້າ, ຜູ້ຊຶ່ງຈະລ້ຽງພວກເຈົ້າດ້ວຍຄວາມຮູ້ ແລະຄວາມເຂົ້າໃຈ.
[16]ແລ້ວສິ່ງນີ້ໄດ້ເກີດຂຶ້ນ ເມື່ອພວກເຈົ້າທະວີຂຶ້ນ ແລະເກີດຜົນໃນແຜ່ນດິນໃນເວລາເຫລົ່ານັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ.
ພວກເຂົາທັງຫລາຍຈະບໍ່ກ່າວອີກຕໍ່ໄປວ່າ, “ຫີບພັນທະສັນຍາແຫ່ງພຣະຢາເວ!” ເລື່ອງນີ້ຈະບໍ່ມີຂຶ້ນໃນໃຈຫົວໃຈຂອງພວກເຂົາອີກຕໍ່ໄປ;
ຫລືຈະບໍ່ມີໃຜລະນຶກໄດ້, ຈະບໍ່ເຮັດຜິດພາດອີກເລີຍ ແລະຈະບໍ່ມີການກະທຳເຊັ່ນນີ້ອີກເລີຍ.’
[17]ໃນເທື່ອນັ້ນ ພວກເຂົາຈະເອີ້ນນະຄອນເຢຣູຊາເລັມວ່າ, ‘ນີ້ເປັນພຣະທີ່ນັ່ງຂອງພຣະຢາເວ,’ ແລະ
ບັນດາປະຊາຊາດຈະຮວບຮວມກັນເຂົ້າມາຫາພຣະນາມຂອງພຣະຢາເວ ໃນນະຄອນເຢຣູຊາເລັມ.
ພວກເຂົາຈະບໍ່ດຳເນີນໃນຄວາມແຂງກະດ້າງໃນຫົວໃຈຊົ່ວຮ້າຍຂອງພວກເຂົາອີກຕໍ່ໄປ.[18]ໃນເວລານັ້ນ,
ເຊື້ອສາຍຂອງຢູດາຈະຍ່າງມາກັບເຊື້ອສາຍຂອງອິດສະຣາເອນ. ພວກເຂົາຈະຮ່ວມກັນມາຈາກແຜ່ນດິນຝ່າຍເຫນືອ
ມາຍັງແຜ່ນດິນຊຶ່ງເຮົາມອບໃຫ້ແກ່ບັນພະບູລຸດຂອງພວກເຈົ້າໃຫ້ເປັນມໍຣະດົກ.
[19]ແຕ່ສຳລັບເຮົາ, ເຮົາກ່າວວ່າ, ‘ເຮົາຈະຕັ້ງພວກເຈົ້າໄວ້ທ່າມກາງລູກຊາຍທັງຫລາຍຂອງເຮົາຢ່າງໃດດີຫນໍ,
ແລະໃຫ້ແຜ່ນດິນທີ່ຫນ້າປາດຖະຫນາແກ່ພວກເຈົ້າເປັນມໍຣະດົກທີ່ສວຍງາມທີ່ສຸດກວ່າສິ່ງອື່ນໃດໃນບັນດາປະຊາຊາດ!’ ເຮົາກ່າວວ່າ,
‘ພວກເຈົ້າຈະເອີ້ນເຮົາວ່າ “ພຣະບິດາຂອງຂ້ານ້ອຍ”.’ ເຮົາຈະບໍ່ໄດ້ກ່າວວ່າ ພວກເຈົ້າຈະບໍ່ຫັນຫລັງກັບຈາກການຕິດຕາມເຮົາ.
[20]ເຊັ່ນດຽວກັບເມຍທໍລະຍົດຖິ້ມຜົວຂອງນາງສັນໃດ ພວກເຈົ້າກໍໄດ້ທໍລະຍົດຕໍ່ເຮົາສັນນັ້ນ, ເຊື້ອສາຍຂອງອິດສະຣາເອນເອີຍ—
ນີ້ເປັນຄຳປະກາດຂອງພຣະຢາເວ.”
[21]ຈະໄດ້ຍິນສຽງມາຈາກບ່ອນໂລ່ງ, ເປັນສຽງຮ້ອງໄຫ້ ແລະສຽງອ້ອນວອນຂອງປະຊາຊົນຂອງອິດສະຣາເອນ!
ເພາະພວກເຂົາໄດ້ຫັນທິດການດຳເນີນຊີວິດຂອງຕົນເສຍແລ້ວ; ພວກເຂົາໄດ້ລືມພຣະຢາເວພຣະຂອງພວກດຂົາ.[22]“ຈົ່ງກັບມາເຖີດ,
ປະຊາຊົນທີ່ບໍ່ສັດຊື່ເອີຍ! ເຮົາຈະຮັກສາຄວາມບໍ່ສັດຊື່ຂອງພວກເຈົ້າໃຫ້ຫາຍດີ!” “ເບິ່ງແມ! ຂ້ານ້ອຍທັງຫລາຍມາຫາພຣະອົງແລ້ວ,
ເພາະພຣະອົງຊົງເປັນພຣະຢາເວພຣະຂອງພວກຂ້ານ້ອຍ!
[23]ແທ້ຈິງໂນນພູກໍເປັນແຕ່ສິ່ງຫລອກຫລວງ, ສຽງທີ່ສັບສົນຈາກພູເຂົາຫລາຍຫນ່ວຍກໍເຊັ່ນດຽວກັນ;
ແທ້ຈິງຄວາມພົ້ນຂອງອິດສະຣາເອນນັ້ນຢູ່ໃນພຣະຢາເວພຣະຂອງພວກເຮົາ.[24]ແຕ່ວ່າ
ສິ່ງທີ່ຫນ້າອັບອາຍນັ້ນໄດ້ກັດກິນສິ່ງທັງປວງທີ່ບັນພະບູລຸດຂອງເຮົາທີ່ໄດ້ລົງແຮງເຮັດໄວ້ຕັ້ງແຕ່ເຮົາຍັງເປັນເດັກນ້ອຍຢູ່ຄື—ຝູງແກະ, ຝູງງົວ,
ລູກຊາຍ, ແລະບຸດສາວທັງຫລາຍຂອງພວກເຂົາ![25]ໃຫ້ເຮົານອນລົງຈົມໃນຄວາມອັບອາຍຂອງເຮົາ. ແລະໃຫ້ຄວາມອັບປະຍົດຄຸມເຮົາໄວ້,
ເພາະເຮົາໄດ້ເຮັດບາບຕໍ່ພຣະຢາເວພຣະພວກເຈົ້າຂອງເຮົາ! ທັງຕົວເຮົາ ແລະ ບັນພະບູລຸດຂອງເຮົາ, ຕັ້ງແຕ່ເຮົາເປັນຫນຸ່ມຢູ່ຈົນທຸກມື້ນີ້,
ພວກເຮົາບໍ່ໄດ້ຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກເຮົາ!”

# 4

1ຖ້າເຈົ້າຢາກຈະກັບມາ ອິດສະຣາເອນເອີຍ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຈົ້າກໍຈົ່ງກັບມາຫາເຮົາ.
ຖ້າເຈົ້າຍອມເອົາສິ່ງທີ່ຫນ້າກຽດຊັງນັ້ນໄປໃຫ້ພົ້ນຈາກຫນ້າເຮົາເສຍ ແລະຢ່າຫນີຫ່າງຈາກເຮົາໄປ,2ເຈົ້າຈະຕ້ອງຊື່ສັດ, ຍຸດຕິທຳ,
ແລະຊອບທຳເມື່ອເຈົ້າສາບານວ່າ, 'ພຣະຢາເວຊົງພຣະຊົນຢູ່ສັນໃດ.' ແລ້ວບັນດາປະຊາຊາດທັງປວງກໍຈະໃຫ້ພອນກັນໃນພຣະອົງ,
ແລະໃນພຣະອົງພວກເຂົາທັງຫລາຍຈະໄດ້ຮຸ່ງເຮືອງ."3ເພາະພຣະຢາເວຊົງກ່າວກັບແຕ່ລະບຸຄົນໃນຢູດາ ແລະໃນນະຄອນເຢຣູຊາເລັມວ່າ:
"ຈົ່ງໄຖດິນນາຂອງພວກເຈົ້າ, ແລະຢ່າຫວ່ານລົງກາງພຸ່ມຫນາມ.

4ຈົ່ງເຂົ້າພິທີຕັດຕົວເຈົ້າເອງຖວາຍແດ່ພຣະຢາເວ, ແລະຈົ່ງຕັດຫນັງຫຸ້ມປາຍຫົວໃຈຂອງເຈົ້າສາ, ພວກຜູ້ຊາຍຢູດາທັງຫລາຍ
ແລະຊາວນະຄອນເຢຣູຊາເລັມທັງຫລາຍເອີຍ, ຢ້ານວ່າຄວາມຄຽດຮ້າຍຂອງເຮົາຈະເຜົາໄຫມ້ເຫມືອນໄຟ,
ແລະໄຟນັ້ນຈະເຜົາໄຫມ້ໂດຍບໍ່ມີໃຜມອດໄດ້ ເນື່ອງຈາກການປະພຶດຄວາມຊົ່ວຮ້າຍທັງຫລາຍຂອງພວກເຈົ້າ.5ຈົ່ງປະກາດໃນຢູດາ
ແລະຈົ່ງເຮັດໃຫ້ໄດ້ຍິນໃນນະຄອນເຢຣູຊາເລັມ. ຈົ່ງກ່າວວ່າ, "ຈົ່ງເປົ່າແກໃນແຜ່ນດິນ." ຈົ່ງຮ້ອງປະກາດດັ່ງໆວ່າ, "ຈົ່ງມາໂຮມກັນ.
ໃຫ້ເຮົາເຂົ້າໄປບັນດາເມືອງທີ່ມີປ້ອມປ້ອງກັນ."6ຈົ່ງຍົກທຸງຂຶ້ນ ແລະມຸ່ງຫນ້າໄປຍັງຊີໂອນ, ແລະຈົ່ງຮີບແລ່ນໄປໃຫ້ປອດໄພ! ຈົ່ງຢ່າລໍຖ້າ,
ເພາະເຮົາກຳລັງນຳຄວາມຈິບຫາຍມາຈາກທິດເຫນືອ ແລະເປັນການທຳລາຍອັນໃຫຍ່ຫລວງ.
7ສິງໂຕຫນຶ່ງກຳລັງອອກມາຈາກບ່ອນລີ້ຊ້ອນຂອງມັນແລ້ວ ແລະບາງຄົນທີ່ກຳລັງຈະທຳລາຍບັນດາປະຊາຊາດກໍກຳລັງຍົກອອກມາແລ້ວ.
ເຂົາກຳລັງຈະອອກໄປຈາກສະຖານທີ່ຂອງເຂົາ ນຳເອົາຄວາມຫນ້າຢ້ານກົວໄປຫາແຜ່ນດິນຂອງເຈົ້າ, ເພື່ອທຳລາຍເມືອງຕ່າງໆໃຫ້ຫມົດສິ້ນໄປ
ຂອງເຈົ້າຈະຖືກປະຮ້າງເປົ່າ, ບໍ່ມີໃຜອາໄສຢູ່ເລີຍ.8ດ້ວຍເຫດນີ້ ຈົ່ງນຸ່ງຜ້າປ່ານເນື້ອຫຍາບໄຫວ້ທຸກ, ຈົ່ງຮ້ອງໄຫ້ຄວນຄາງ ແລະຮ້ອງວ່າ
ເພາະຄວາມໂກດຮ້າຍອັນຮຸນແຮງຂອງພຣະຢາເວ ບໍ່ໄດ້ຫັນຫນີໄປຈາກເຮົາ.
9ແລ້ວສິ່ງນີ້ຈະເກີດຂຶ້ນໃນມື້ນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—ໃນມື້ນັ້ນທັງກະສັດ ແລະ ພວກເຈົ້ານາຍຈະເສຍຊີວິດ.
ບັນດາປະໂລຫິດຈະຕະລຶງຕົກໃຈ, ແລະຜູ້ປະກາດພຣະທັມທັງຫລາຍກໍຈະຢ້ານກົວ."10ແລ້ວຂ້ານ້ອຍຈຶ່ງທູນວ່າ,
"ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ ແນ່ນອນວ່າພຣະອົງຊົງຫລອກລວງຊົນຊາດນີ້ ແລະ ນະຄອນເຢຣູຊາເລັມວ່າ,
'ພວກເຈົ້າທັງຫລາຍຈະຢູ່ເຢັນເປັນສຸກ.' ແຕ່ທີ່ຈິງດາບໄດ້ມາເຖິງຊີວິດຂອງພວກເຂົາ."
11ໃນເທື່ອນັ້ນ ຈະໄດ້ກ່າວແກ່ຊົນຊາດນີ້ ແລະ ແກ່ນະຄອນເຢຣູຊາເລັມໂດຍກ່າວວ່າ, "ລົມຮ້ອນຈາກບ່ອນສູງທັງຫລາຍຂອງທະເລຊາຍ
ຈະພັດມາຕາມເສັ້ນທາງສູ່ລູກສາວຂອງປະຊາຊົນຂອງເຮົາ. ມັນຈະບໍ່ມາຟັດ ຫລືມາຊໍາລະພວກເຂົາ.12ກະແສລົມມາແຮງເກີນກວ່ານັ້ນອີກ
ຈະມາໂດຍຄຳສັ່ງຂອງເຮົາ, ແລະ ເຮົາເອງຈະເປັນຜູ້ກ່າວຄຳຕັດສິນຕໍ່ພວກເຂົາ.
13ເບິ່ງແມ, ເຂົາກຳລັງຈູ່ໂຈມເຫມືອນບັນດາເມກ, ແລະພວກລົດມ້າຮົບເສິກຂອງເຂົາເຫມືອນລົມພາຍຸ.
ມ້າທັງຫລາຍຂອງພວກເຂົາໄວຍິ່ງກວ່ານົກອິນຊີ. ວິບັດແກ່ພວກເຮົາ, ເພາະວ່າເຮົາຈະຕ້ອງຈິບຫາຍ!
14ຈົ່ງລ້າງຈິດໃຈຂອງພວກເຈົ້າໃຫ້ພົ້ນຈາກຄວາມຊົ່ວຮ້າຍ, ນະຄອນເຢຣູຊາເລັມເອີຍ, ເພື່ອພວກເຈົ້າຈະລອດພົ້ນໄດ້.
ດົນປານໃດທີ່ຄວາມຄິດເລິກໆ ຂອງເຈົ້າຈະເຊົາຄິດແຕ່ເລື່ອງຄວາມຊົ່ວຮ້າຍ?15ເພາະວ່າມີສຽງປະກາດມາຈາກເມືອງດານ, ແລະ
ຄວາມຈິບຫາຍທີ່ກຳລັງຈະມາທີ່ໄດ້ຍິນຈາກພູເຂົາເອຟຣາອິມ.
16ຈົ່ງໃຫ້ບັນດາປະຊາຊາດຄິດເຖິງສິ່ງເຫລົ່ານີ້: ເບິ່ງແມ, ນີ້ນະ ຈົ່ງປະກາດແກ່ນະຄອນເຢຣູຊາເລັມວ່າ ບັນດາຜູ້ອ້ອມກຳລັງມາຈາກແຜ່ນດິນໄກ
ໂຫ່ຮ້ອງໃນການໂຈມຕີເຂົ້າໃສ່ຫົວເມືອງຕ່າງໆຂອງ ຢູດາ.17ພວກເຂົາທັງຫລາຍເຫມືອນພວກຜູ້ເບິ່ງແຍງທົ່ງນາ
ທີ່ກຽມດິນໄວ້ເພາະປູກທີ່ອ້ອມນາງໄວ້ອ້ອມຮອບ, ເພາະວ່ານາງໄດ້ກະບົດຕໍ່ເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ ກ່າວດັ່ງນີ້ວ່າ—
18ແລະການດຳເນີນຊີວິດ ພ້ອມກັບການກະທຳທັງຫລາຍຂອງພວກເຈົ້າ ໄດ້ນຳສິ່ງເຫລົ່ານີ້ຕໍ່ເຈົ້າ. ນີ້ຈະເປັນການລົງໂທດຂອງເຈົ້າ.
ມັນຈະຫນ້າຢ້ານຂະຫນາດໃດ! ມັນຈະເຮັດໃຫ້ພວກເຈົ້າສະເທືອນໃຈທີ່ສຸດ."
19ດວງໃຈຂອງຂ້ານ້ອຍເອີຍ! ຈິດໃຈຂອງຂ້ານ້ອຍ! ຂ້ານ້ອຍແສນລະທົມ ແສນລະທົມໃນຈິດໃຈ. ຈິດໃຈຂອງຂ້ານ້ອຍກໍສັ່ນຢູ່ພາຍໃນ.
ຂ້ານ້ອຍຈະຢູ່ມິດເສີຍບໍ່ໄດ້ ເພາະຂ້ານ້ອຍໄດ້ຍິນສຽງເຂົາສັດ, ແລະສຽງປຸກຂອງສົງຄາມ.20ຄວາມຈິບຫາຍໄລ່ຕິດຕາມຄວາມຈິບຫາຍ;
ເພາະແຜ່ນດິນທັງຫມົດກໍຖືກຖິ້ມຮ້າງ. ບັນດາເຕັ້ນຂອງຂ້ານ້ອຍຖືກທຳລາຍໄປໂດຍທັນໃດ,
ແລະຊົ່ວຂະນະດຽວຜ້າມ່ານເຕັ້ນທັງຫລາຍຂອງຂ້ານ້ອຍຫມົດກ້ຽງໄປ.
21ຂ້ານ້ອຍຈະຕ້ອງເບິ່ງອີກດົນປານໃດ ຈຶ່ງຈະເຫັນທຸງໄຊ? ຂ້ານ້ອຍຈະໄດ້ຍິນສຽງເຂົາສັດຫລືບໍ່?22ເພາະຄວາມໂງ່ຈ້າຂອງປະຊາຊົນຂອງເຮົາ—
ພວກເຂົາບໍ່ຮູ້ຈັກເຮົາ. ພວກເຂົາເປັນລູກຫລານທີ່ໂງ່ຈ້າ ແລະພວກເຂົາບໍ່ມີຄວາມເຂົ້າໃຈ. ພວກເຂົາຊຳນານໃນການເຮັດຊົ່ວ,
ແຕ່ພວກເຂົາບໍ່ຮູ້ຈັກທີ່ຈະເຮັດດີ.
23ຂ້ານ້ອຍ ເບິ່ງແຜ່ນດິນໂລກ. ເບິ່ງແມ! ເປັນທີ່ຮ້າງ ແລະວ່າງເປົ່າ. ເພາະທ້ອງຟ້ານັ້ນກໍບໍ່ມີຄວາມສະຫວ່າງ.24ຂ້ານ້ອຍໄດ້ເບິ່ງ ບັນດາໂນນພູ.
ເບິ່ງແມ, ມັນກຳລັງສັ່ນສະເທືອນ, ແລະເນີນພູທັງຫມົດກໍແກວ່ງໄປແກວ່ງມາ.25ຂ້ານ້ອຍໄດ້ເບິ່ງ. ເບິ່ງແມ, ບໍ່ມີມະນຸດເລີຍ
ແລະນົກທັງປວງແຫ່ງທ້ອງຟ້າໄດ້ຫນີໄປແລ້ວ.26ຂ້ານ້ອຍໄດ້ເບິ່ງ. ເບິ່ງແມ, ຮົ້ວສວນໄຮ່ນາກໍເປັນຖິ່ນແຫ້ງແລ້ງກັນດານ
ແລະເມືອງທັງຫມົດກໍຫັກພັງໄປ ຕໍ່ພຣະພັກພຣະຢາເວ, ຕໍ່ຄວາມໂກດຮ້າຍອັນຮ້ອນແຮງຂອງພຣະອົງ."
27ພຣະຢາເວກ່າວດັ່ງນີ້ວ່າ, "ແຜ່ນດິນທັງຫມົດຈະເປັນບ່ອນຮ້າງເປົ່າ. ແຕ່ເຮົາກໍຈະບໍ່ໄດ້ເຮັດໃຫ້ເຖິງອາວະສານເທື່ອ.28ເພາະດ້ວຍເຫດຜົນນີ້,
ແຜ່ນດິນໂລກຈະໄວ້ທຸກ ແລະທ້ອງຟ້າເບື້ອງເທິງຈະດຳມືດ. ເພາະເຮົາໄດ້ປະກາດຄວາມຕັ້ງໃຈໄວ້ແລ້ວ; ເຮົາຈະບໍ່ປ່ຽນໃຈ; ຫລືຖອຍຫລັງກັບ
ຈົນກວ່າທຸກຢ່າງຈະສຳເລັດ.29ທຸກເມືອງຈະຫນີຈາກສຽງທະຫານມ້າ ແລະບັນດານັກທະນູ ພ້ອມກັບທະນູ;
ພວກເຂົາແລ່ນເຂົ້າໄປຢູ່ໃນປ່າທັງຫລາຍ. ຊາວເມືອງທຸກແຫ່ງປີນໄປຕາມສະຖານທີ່ເປັນພູເຂົາ, ເມືອງເຫລົ່ານັ້ນກໍຖືກປະຖິ້ມ
ເພາະບໍ່ມີມະນຸດຜູ້ໃດອາໄສຢູ່ໃນເມືອງເຫລົ່ານັ້ນເລີຍ.
30ບັດນີ້ເຈົ້າກໍຖືກຖິ້ມຮ້າງ, ພວກເຈົ້າຈະເຮັດຫຍັງ? ເພາະເຖິງວ່າເຈົ້າປະດັບຕົວດ້ວຍເຄື່ອງສີແດງ, ແລະເອ້ຕົວດ້ວຍເຄື່ອງປະດັບ ທອງຄຳ,
ແລະເຮັດໃຫ້ດວງຕາທັງສອງໃຫ້ກວ້າງດ້ວຍສີແຕ້ມ, ພວກຜູ້ຊາຍທີ່ເຄີຍປາດຖະຫນາໃນຕົວເຈົ້າ ບັດນີ້ກໍປະຕິເສດເຈົ້າ.
ພວກເຂົາທັງຫລາຍຈະສະແຫວງຫາຊີວິດຂອງພວກເຈົ້າ.31ເພາະເຮົາໄດ້ຍິນສຽງຮ້ອງດ້ວຍຄວາມເຈັບປວດ,

ແສນທໍລະມານຄືກັບຍິງຈະເກີດລູກຫົວປີ, ສຽງຮ້ອງແຫ່ງລູກສາວຊີໂອນ. ນາງແທບຈະຂາດໃຈ. ນາງຢຽດມືຂອງນາງອອກຮ້ອງວ່າ, ‘ວິບັດແກ່ຂ້ານ້ອຍ! ຈິດໃຈຂ້ານ້ອຍກໍອ່ອນເພຍ ເພາະເຫດຂ້າຕະກອນນີ້.’”

 generated on Tue Jun 17 19:01:42 2025

5 1"ຈົ່ງແລ່ນໄປແລ່ນຢູ່ໃນຖະໜົນຂອງນະຄອນເຢຣູຊາເລັມ; ຈົ່ງຄົ້ນຕາມລານເມືອງ, ເຊັ່ນກັນ. ແລ້ວເບິ່ງ ແລະຄິດກ່ຽວກັບເລື່ອງນີ້:
ຖ້າເຈົ້າຈະຫາຜູ້ຊາຍ ຫລືໃຜຜູ້ໜຶ່ງ ຄົນທີ່ເຮັດການຍຸດຕິທຳ ແລະ ສະແຫວງຫາຄວາມຈິງ, ເພື່ອເຮົາຈະໄດ້ອະໄພໂທດໃຫ້ແກ່ເຢຣູຊາເລັມ.
2ເຖິງແມ່ນພວກເຂົາກ່າວວ່າ, 'ຕາບໃດທີ່ພຣະຢາເວຊົງພຣະຊົນຢູ່,' ພວກເຂົາກໍຍັງປະຕິຍານບໍ່ຈິງ."3ຂ້າແດ່ພຣະຢາເວ,
ພຣະເນດຂອງພຣະອົງຊົງຫາຄວາມຈິງບໍ່ແມ່ນຫລື? ພຣະອົງຊົງຂ້ຽນຕີປະຊາຊົນ, ແຕ່ພວກເຂົາກໍບໍ່ຮູ້ສຶກເຈັບປວດ.
ພຣະອົງຊົງລ້າງຜານພວກເຂົາຢ່າງສິ້ນເຊີງ, ແຕ່ພວກເຂົາກໍຍັງປະຕິເສດທີ່ຈະຮັບການແກ້ໄຂ.
ພວກເຂົາໄດ້ເຮັດໃຫ້ໜ້າຂອງຕົນແຂງກະດ້າງຍິ່ງກວ່າຫີນ, ເພາະພວກເຂົາບໍ່ຍອມກັບໃຈ.

4ແລ້ວຂ້ານ້ອຍເວົ້າວ່າ, "ແນ່ນອນ ຄົນເຫລົ່ານີ້ເປັນປະຊະຊົນທີ່ຍາກຈົນ. ພວກເຂົາໂງ່ຈ້າ, ເພາະບໍ່ຮູ້ຈັກເສັ້ນທາງຂອງພຣະຢາເວ,
ບໍ່ຮູ້ຈັກພຣະບັນຍັດຂອງພຣະເຈົ້າຂອງພວກເຂົາ.5ຂ້ານ້ອຍຈະໄປຫາພວກຜູ້ໃຫຍ່ທີ່ມີຄວາມສຳຄັນ
ແລະຈະປະກາດຄຳສອນຂອງພຣະເຈົ້າກັບພວກເຂົາ, ເພາະຢ່າງໜ້ອຍພວກເຂົາຮູ້ຈັກເສັ້ນທາງຂອງພຣະຢາເວ,
ແລະຮູ້ຈັກພຣະບັນຍັດຂອງພຣະເຈົ້າຂອງພວກເຂົາ." ແຕ່ພວກເຂົາທຸກຄົນໄດ້ຫັກແອກເສຍ; ພວກເຂົາໄດ້ທຳລາຍແອກຂອງພວກເຂົາເຊັ່ນກັນ;
ພວກເຂົາໄດ້ຫັກໂສ້ທີ່ຜູກມັດພວກເຂົາກັບພຣະເຈົ້າ.6ເພາະສະນັ້ນ ໂຕສິງຈາກປ່າຈະມາຈູ່ໂຈມພວກເຂົາ. ໝາປ່າຈາກ ອາຣາບາ
ຈະທຳລາຍພວກເຂົາ. ເສືອດາວຈະມາຕໍ່ຕ້ານຫົວເມືອງທັງຫລາຍຂອງພວກເຂົາ. ໃຜກໍຕາມທີ່ອອກໄປຈາກເມືອງຂອງເຂົາ
ຈະຖືກຈີກເປັນຕ່ອນໆ. ເພາະການລະເມີດຂອງເຂົາກໍເພີ່ມຫລາຍຂຶ້ນ. ການປະພຶດບໍ່ສັດຊື່ ຂອງພວກເຂົາກໍບໍ່ມີຂີດຈຳກັດ.
7ເປັນຫຍັງເຮົາຄວນຈະໃຫ້ອະໄພປະຊາຊົນເຫລົ່ານີ້? ລູກຊາຍທັງຫລາຍຂອງເຈົ້າໄດ້ປະຖິ້ມເຮົາແລ້ວ ແລະ
ໄດ້ສາບານໂດຍສິ່ງທີ່ບໍ່ແມ່ນພະເຈົ້າທັງຫລາຍ. ເຮົາໄດ້ລ້ຽງພວກເຂົາໃຫ້ອີ່ມ, ແຕ່ພວກເຂົາກໍໄດ້ລ່ວງປະເວນີ ແລະ
ກໍຍົກຂະບວນກັນໄປທີ່ເຮືອນຂອງຍິງໂສເພນີ.8ພວກເຂົາເໝືອນກັບມ້າທີ່ຮ້ອນຮົນ. ພວກເຂົາໄດ້ທ່ອງທ່ຽວໄປເພື່ອຫາຄູ່ນອນ.
ທຸກຄົນຕ່າງກໍຮ້ອງຫາເມຍຂອງເພື່ອນບ້ານຂອງຕົນ."9ດັ່ງນັ້ນເຮົາຈະບໍ່ຄວນລົງໂທດພວກເຂົາບໍ່—ນີ້ເປັນຄຳປະກາດຂອງພຣະຢາເວ—
ແລະເຮົາບໍ່ຄວນທີ່ຈະແກ້ແຄ້ນເອງແກ່ປະຊາຊາດທີ່ເປັນແບບນີ້ຫລື?
10ຈົ່ງໄປເທີນ ໄປຕາມແຖວຕົ້ນອະງຸ່ນຂອງນາງ ແລະ ທຳລາຍເສຍ. ແຕ່ຢ່າໃຫ້ເຖິງການທຳລາຍຢ່າງສິ້ນເຊີງ ແກ່ພວກໃນເທືອດຽວ.
ຕັດເອົາກິ່ງກ້ານຂອງມັນອອກ, ເນື່ອງຈາກເຄືອນັ້ນບໍ່ໄດ້ມາຈາກພຣະຢາເວ.11ເພາະເຊື້ອສາຍຂອງອິດສະຣາເອນ
ແລະເຊື້ອສາຍຂອງຢູດາໄດ້ທໍລະຍົດຕໍ່ເຮົາແລ້ວ—ນີ້ເປັນຄຳປະກາດຂອງພຣະຢາເວ.12ພວກເຂົາເວົ້າຂີ້ຕົວະໃນເລື່ອງພຣະຢາເວ
ແລະພວກເຂົາໄດ້ເວົ້າວ່າ, "ພຣະອົງຈະບໍ່ໄດ້ຊົງກະທຳປະການໃດ; ບໍ່ມີການຮ້າຍອັນໃດຈະເກີດຂຶ້ນກັບເຮົາ, ແລະເຮົາຈະບໍ່ເຫັນດາບ ຫລື
ການອຶດຫິວອາຫານ.13ພວກຜູ້ປະກາດພຣະທັມກໍຈະກາຍເປັນພຽງລົມ, ພຣະທັມບໍ່ມີໃນຄົນເຫລົ່ານັ້ນ, ດັ່ງນັ້ນຈົ່ງຂໍໃຫ້ສິ່ງທີ່ພວກເຂົາເວົ້າ
ຈົ່ງເປັນຢ່າງນັ້ນແກ່ພວກເຂົາເຖີດ."
14ເພາະສະນັ້ນ, ພຣະຢາເວພຣະເຈົ້າຈອມໂຍທາຈຶ່ງກ່າວດັ່ງນີ້ວ່າ, "ເພາະພວກເຈົ້າໄດ້ກ່າວຖ້ອຍຄຳເຫລົ່ານີ້, ເບິ່ງແມ,
ເຮົາຈະວາງຖ້ອຍຄຳຂອງເຮົາໃນປາກຂອງພວກເຈົ້າ. ມັນຈະເປັນເໝືອນໄຟ, ແລະປະຊາຊົນຊາດນີ້ເປັນເໝືອນຟືນ!
ໄຟນັ້ນຈະເຜົາຜານພວກເຂົາເສຍ.15ເບິ່ງແມ! ເຊື້ອສາຍຂອງອິດສະຣາເອນເອີຍ, ເຮົາຈະນຳປະຊາຊາດຈາກແດນໄກມາສູ້ພວກເຈົ້າທັງຫລາຍ—
ນີ້ເປັນຄຳປະກາດຂອງພຣະຢາເວ—ເປັນປະຊາຊາດທີ່ໝັ້ນຄົງ, ແລະເປັນຊົນຊາດດຶກດຳບັນ! ເປັນຊົນຊາດທີ່ພວກເຈົ້າບໍ່ຮູ້ພາສາຂອງເຂົາ,
ພວກເຈົ້າກໍບໍ່ເຂົ້າໃຈວ່າພວກເຂົາຈະເວົ້າຫຍັງ.
16ແຫລ່ງທະນູຂອງເຂົາເໝືອນຂຸມຝັງສົບເປີດອອກ. ພວກເຂົາເປັນນັກຮົບທຸກຄົນ.17ພວກເຂົາຈະກິນສິ່ງທີ່ພວກເຈົ້າກ່ຽວໄດ້,
ພວກເຂົາຈະກິນລູກຊາຍ ແລະລູກສາວຂອງພວກເຈົ້າດ້ວຍເຊັ່ນກັນ, ແລະກິນອາຫານຂອງເຈົ້າ. ພວກເຂົາຈະກິນຝູງແກະຝູງງົວຂອງພວກເຈົ້າ;
ພວກເຂົາຈະກິນຜົນຈາກເຄືອອະງຸ່ນ ແລະຕົ້ນໝາກເດື່ອເທດຂອງພວກເຈົ້າ. ພວກເຂົາຈະທຳລາຍຕົວເມືອງທີ່ມີປ້ອມຂອງພວກເຈົ້າ
ຊຶ່ງພວກເຈົ້າວາງໃຈນັ້ນ.
18ແມ່ນແຕ່ໃນວັນເຫລົ່ານັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ ກ່າວດັ່ງນີ້—ເຮົາກໍຍັງບໍ່ທຳລາຍເຈົ້າໃຫ້ເຖິງອາວະສານ.19ເມື່ອພວກເຈົ້າ,
ອິດສະຣາເອນ ແລະຢູດາ, ກ່າວວ່າ, 'ເປັນຫຍັງພຣະຢາເວພຣະເຈົ້າຂອງເຮົາທັງຫລາຍຈຶ່ງຊົງເຮັດສິ່ງເຫລົ່ານີ້ແກ່ເຮົາ?' ແລ້ວເຈົ້າ, ເຢເຣມີຢາ,
ຈະກ່າວແກ່ພວກເຂົາວ່າ, 'ເພາະເຈົ້າໄດ້ປະຖິ້ມເຮົາ ໄປບົວລະບັດພະຕ່າງດ້າວໃນແຜ່ນດິນຂອງພວກເຈົ້າ,
ດັ່ງນັ້ນເຈົ້າຈະຕ້ອງໄປບົວລະບັດຄົນຕ່າງຊາດໃນແຜ່ນດິນຊຶ່ງບໍ່ແມ່ນຂອງພວກເຈົ້າ.'
20ຈົ່ງປະກາດຂໍ້ຄວາມຕໍ່ເຊື້ອສາຍຢາໂຄບ ແລະຈົ່ງປະກາດເລື່ອງນີ້ໃຫ້ໄດ້ຍິນໃນຢູດາ. ກ່າວວ່າ,21'ຈົ່ງຟັງສິ່ງນີ້, ປະຊາຊົນທີ່ໂງ່ຈ້າ
ແລະຂາດຄວາມເຂົ້າໃຈ; ຜູ້ມີດວງຕາແຕ່ເບິ່ງບໍ່ເຫັນ, ຜູ້ມີຫູແຕ່ຟັງບໍ່ໄດ້ຍິນ.22ເຈົ້າບໍ່ຢ້ານເກງເຮົາຫລື—ນີ້ເປັນຄຳປະກາດຂອງພຣະຢາເວ—
ຫລືເຈົ້າບໍ່ຕົວສັ່ນຢູ່ຕໍ່ໜ້າເຮົາບໍ່? ເຮົາຜູ້ວາງກອງດິນຊາຍໄວ້ເປັນເຂດອ້ອມທະເລ, ເປັນເຄື່ອງກີດຂວາງເປັນນິດບໍ່ໃຫ້ຜ່ານໄປໄດ້—
ເຖິງວ່າຄື້ນຈະຊັດ, ກໍເອົາຊະນະບໍ່ໄດ້. ແມ່ນຄື້ນຈະຄະນອງ, ກໍຂ້າມໄປບໍ່ໄດ້.
23ແຕ່ປະຊາຊົນເຫລົ່ານີ້ມີໃຈດື້ດ້ານ. ເຂົາໄດ້ຫັນເຫໃນການກໍ່ກະບົດ ແລະຈາກໄປເສຍ.24ເພາະພວກເຂົາບໍ່ໄດ້ຄິດໃນໃຈຂອງຕົນເອງວ່າ,
"ໃຫ້ພວກເຮົາຢຳເກງພຣະຢາເວພຣະເຈົ້າຂອງພວກເຮົາ, ຜູ້ຊົງປະທານຝົນ—ຄືຝົນຕົ້ນລະດູ ແລະຝົນປາຍລະດູໃນເວລາ—
ທີ່ຖືກຕ້ອງຕາມລະດູການ, ຊົງຮັກສາກົດເກນຂອງອາທິດແຫ່ງການເກັບກ່ຽວ ໄວ້ໃຫ້ແກ່ພວກເຮົາ."25ສິ່ງຊົ່ວຮ້າຍທັງຫລາຍຂອງເຈົ້າ
ໄດ້ເຮັດໃຫ້ສິ່ງເຫລົ່ານີ້ຫັນເຫໄປເສຍ. ບາບທັງຫລາຍຂອງພວກເຈົ້າກໍກັນສິ່ງທີ່ດີໄວ້ເສຍຈາກພວກເຈົ້າ.
26ເພາະຄົນອະທຳຈະໄດ້ພົບທ່າມກາງປະຊາຊົນຂອງເຮົາ. ພວກເຂົາຄອຍຖ້າເໝືອນຄົນດັກນົກລີ້ຢູ່; ພວກເຂົາວາງກັບດັກໄວ້ ແລະ
ເຂົາດັກຈັບປະຊາຊົນ.27ເໝືອນກັບຕຸ້ມທີ່ມີນົກເຕັມ, ເຮືອນຂອງພວກເຂົາກໍເຕັມດ້ວຍຄວາມທໍລະຍົດ. ດັ່ງນັ້ນ ພວກເຂົາຈຶ່ງໃຫຍ່ໂຕ ແລະ
ກາຍເປັນຄົນຮັ່ງມີ.28ພວກເຂົາຈຶ່ງອ້ວນພີ; ເພາະພວກເຂົາສະແດງອອກວ່າກິນຢູ່ດີ. ພວກເຂົາລ້ຳໜ້າໃນເລື່ອງການເຮັດຄວາມຊົ່ວ.
ພວກເຂົາບໍ່ໄດ້ແກ້ຕ່າງໃນຄະດີຂອງປະຊາຊົນ, ຫລືໃນຄະດີຂອງລູກກຳພ້າ. ພວກເຂົາຈະເລີນກ້າວໜ້າ
ເຖິງວ່າພວກເຂົາບໍ່ໄດ້ໃຫ້ຄວາມຍຸດຕິທຳ ແກ່ຜູ້ທີ່ຂັດສົນ.29ຄວນທີ່ເຮົາຈະບໍ່ລົງໂທດເຂົາ ເພາະສິ່ງເຫລົ່ານີ້ຫລື—
ນີ້ເປັນຄຳປະກາດຂອງພຣະຢາເວ—ແລະບໍ່ຄວນທີ່ເຮົາຈະແກ້ແຄ້ນປະຊາຊາດທີ່ເປັນເຊັ່ນນີ້ຫລື?

[30]ສິ່ງທີ່ໜ້າຕົກໃຈ ແລະໜ້າຢ້ານກົວ ໄດ້ເກີດຂຶ້ນໃນແຜ່ນດິນ. [31]ບັນດາຜູ້ປະກາດພຣະທັມ ໄດ້ປະກາດພຣະທັມບໍ່ຈິງ
ແລະບັນດາປະໂລຫິດກໍປົກຄອງຕາມອຳນາດຂອງພວກເຂົາ. ປະຊາຊົນຂອງເຮົາກໍມັກແບບນີ້
ແຕ່ແມ່ນຫຍັງຈະເກີດຂຶ້ນໃນວາລະສຸດທ້າຍມາເຖິງ?'"


generated on Tue Jun 17 19:01:42 2025

6 1ຈົ່ງໄປຫາຄວາມປອດໄພ, ປະຊາຊົນເບັນຢາມິນເອີຍ, ໂດຍການໜີໄປຈາກນະຄອນເຢຣູຊາເລັມ. ຈົ່ງເປົ່າແກໃນເມືອງເຕໂກອາ.
ຈົ່ງຍົກສັນຍານໄຟຂຶ້ນໄວ້ເທິງເບັດຮັກເຄເຣັມ, ເພາະເຫດຮ້າຍກຳລັງປາກົດຂຶ້ນຈາກທາງທິດເໜືອ;
ຄືການທຳລາຍຢ່າງໃຫຍ່ຫລວງກຳລັງມາ. 2ລູກສາວແຫ່ງຊີໂອນ, ຍິງສາວທີ່ສວຍງາມ ແລະ ບອບບາງ, ກຳລັງຈະຖືກທຳລາຍ.
3ບັນດາຜູ້ລ້ຽງແກະພ້ອມກັບຝູງແກະຈະມາຫາພວກເຂົາ; ພວກເຂົາຈະຕັ້ງເຕັ້ນອ້ອມນາງໄວ້;
ຜູ້ຊາຍແຕ່ລະຄົນກໍຈະດູແລພວກມັນດ້ວຍມືຂອງເຂົາເອງ.

4“ຈົ່ງອຸທິດຕົວຂອງພວກເຈົ້າກັບບັນດາເທບພະເຈົ້າທັງຫລາຍ ເພື່ອຕຽມເຮັດສົງຄາມ. ຈົ່ງລຸກຂຶ້ນ, ໃຫ້ເຮົາໂຈມຕີຕອນທ່ຽງວັນ. ໜ້າເສຍດາຍ
ເພາະວ່າກາງເວັນຄ້ອຍໄປເສຍແລ້ວ, ເງົາຂອງເວລາຄ່ຳກໍກຳລັງຈະຕົກ. 5“ແຕ່ໃຫ້ພວກເຮົາເຂົ້າໂຈມຕີຕອນກາງຄືນ
ແລະໃຫ້ທຳລາຍບັນດາປ້ອມອັນເຂັ້ມແຂງຂອງນາງເສຍ.”
6ເພາະພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: “ຈົ່ງປ້ຳບັນດາຕົ້ນໄມ້ຂອງນາງລົງ ແລະກອງລ້ອມຍຶດນະຄອນເຢຣູຊາເລັມ.
ນີ້ແຫລະນະຄອນທີ່ຕ້ອງຖືກໂຈມຕີ, ເພາະວ່າມັນເປັນເມືອງທີ່ມີແຕ່ການບີບບັງຄັບຂົ່ມເຫງ. 7ເໝືອນບໍ່ນ້ຳທີ່ມີນ້ຳສະອາດໄຫລອອກມາ ສັນໃດ,
ດັ່ງນັ້ນເມືອງນີ້ກໍເຮັດໃຫ້ເກີດຄວາມຊົ່ວຂຶ້ນເລື້ອຍໆ ສັນນັ້ນ. ຄວາມທາລຸນ ແລະ ການທຳລາຍກໍມີໃຫ້ໄດ້ຍິນສະເໝີພາຍໃນນາງ;
ຄວາມເຈັບປວດເສົ້າໂສກ ແລະ ຄວາມບາດເຈັບກໍປະກົດຕໍ່ເຮົາສະເໝີ. 8ນະຄອນເຢຣູຊາເລັມເອີຍ, ຈົ່ງຮັບຄຳຕັກເຕືອນເຖີດ,
ຢ້ານວ່າຈິດໃຈເຮົາຈະຫວິດຕົວໄປເສຍຈາກພວກເຈົ້າ, ຫລືເຮັດໃຫ້ພວກເຈົ້າເປັນບ່ອນຮ້າງເປົ່າ, ເປັນແຜ່ນດິນປາດສະຈາກຄົນອາໄສ.'"
9ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, “ພວກເຂົາທັງຫລາຍຈະກວາດຕ້ອນຄົນເຫລົ່ານັ້ນ ທີ່ເຫລືອຢູ່ໃນອິດສະຣາເອນຢ່າງແນ່ນອນ
ເໝືອນກັບສວນອະງຸ່ນ. ຈົ່ງຍື່ນມືຂອງເຈົ້າອອກໄປ ເພື່ອເກັບໝາກອະງຸ່ນຈາກກິ່ງທັງຫລາຍຂອງມັນອີກເທື່ອໜຶ່ງ.” 10ຂ້ານ້ອຍຄວນຈະປະກາດ
ແລະໃຫ້ຄຳຕັກເຕືອນແກ່ຜູ້ໃດ ເພື່ອພວກເຂົາຈະໄດ້ເຊື່ອຟັງ? ເບິ່ງແມ! ຫູທັງສອງຂ້າງຂອງເຂົາບໍ່ໄດ້ເຂົ້າພິທີຕັດ;
ພວກເຂົາບໍ່ສາມາດຈະໃຫ້ຄວາມສົນໃຈໄດ້! ເບິ່ງແມ! ພຣະທັມຂອງພຣະຢາເວໄດ້ໄປຫາພວກເຂົາ ເພື່ອຕັກເຕືອນພວກເຂົາ,
ແຕ່ພວກເຂົາບໍ່ຕ້ອງການຟັງ.”
11ແຕ່ຂ້ານ້ອຍມີຄວາມໂກດຮ້າຍຂອງພຣະຢາເວເຕັມໄປໝົດ. ຂ້ານ້ອຍເມື່ອຍເກີນທີ່ຈະເກັບມັນໄວ້ອີກແລ້ວ. ພຣະອົງກ່າວກັບຂ້ານ້ອຍວ່າ,
“ຈົ່ງຖອກອອກຫົດເດັກນ້ອຍຢູ່ຕາມຖະໜົນ ແລະ ຫົດພວກຄົນໜຸ່ມທີ່ຊຸມນຸມກັນຢູ່.
ເພາະວ່າຜູ້ຊາຍທຸກຄົນຈະຕ້ອງເອົາໄປພ້ອມກັບເມຍຂອງພວກເຂົາ; ແລະທັງຄົນເຖົ້າທຸກຄົນກໍຈະຕ້ອງລຳບາກໃນປີຂອງພວກເຂົາ.
12ບ້ານເຮືອນທັງຫລາຍຂອງພວກເຂົາຈະຕ້ອງຍົກໃຫ້ເປັນຂອງຄົນອື່ນ, ທັງໄຮ່ນາ ແລະ ເມຍຂອງພວກເຂົາເໝືອນກັນ.
ເພາະເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ຜູ້ທີ່ອາໄສຢູ່ເຖິງແຜ່ນດິນນັ້ນ”—ນີ້ເປັນຄຳປະກາດຂອງພຣະຢາເວ.
13ພຣະຢາເວຊົງປະກາດວ່າ ຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ, ທຸກຄົນໂລບຢາກໄດ້ໂດຍສໍ້ໂກງ.
ຕັ້ງແຕ່ຜູ້ປະກາດພຣະທັມຕະຫລອດເຖິງປະໂລຫິດ, ທຸກຄົນປະພຶດຫລອກຫລວງ. 14ພວກເຂົາໄດ້ຮັກສາບາດແຜ
ຂອງປະຊາຊົນຂອງເຮົາແຕ່ພຽງເລັກນ້ອຍ, ກ່າວວ່າ, ‘ສັນຕິສຸກ, ສັນຕິສຸກ,’ ເມື່ອບໍ່ມີສັນຕິສຸກເລີຍ. 15ເມື່ອພວກເຂົາເຮັດການໜ້າກຽດໜ້າຊັງ
ພວກເຂົາອັບອາຍບໍ? ພວກເຂົາບໍ່ອັບອາຍເລີຍ; ພວກເຂົາບໍ່ຮູ້ຈັກວ່າຢ່າງໃດຈຶ່ງຈະຂາຍໜ້າ! ເພາະສະນັ້ນ
ພວກເຂົາຈະລົ້ມລົງທ່າມກາງພວກທີ່ລົ້ມລົງແລ້ວ; ເມື່ອເຮົາລົງໂທດພວກເຂົາ ພວກເຂົາກໍຈະລົ້ມ, ພຣະຢາເວກ່າວດັ່ງນີ້ແຫລະ.
16ພຣະຢາເວຊົງກ່າວດັ່ງນີ້ວ່າ, “ຈົ່ງຢືນຢູ່ທີ່ທາງສີ່ແຍກແລະເບິ່ງໃຫ້ດີ; ຈົ່ງຖາມຫາທາງໂບຮານນັ້ນວ່າ, ‘ທາງດີຢູ່ໃສ?’
ແລ້ວໃຫ້ຍ່າງເຂົ້າໄປໃນທາງນັ້ນ ແລະພວກເຈົ້າຈະພົບຄວາມສະຫງົບສຸກ. ແຕ່ພວກເຈົ້າໄດ້ເວົ້າວ່າ,
‘ພວກເຮົາຈະບໍ່ຍ່າງເຂົ້າໄປໃນທາງນັ້ນ.’ 17ເຮົາໄດ້ແຕ່ງຄົນເຝົ້າຍາມໄວ້ສຳລັບພວກເຈົ້າ ເພື່ອຟັງສຽງແກ. ແຕ່ພວກເຂົາທັງຫລາຍໄດ້ເວົ້າວ່າ,
‘ພວກເຮົາຈະບໍ່ຟັງ.’ 18ດ້ວຍເຫດນີ້, ຊາດຕ່າງໆເອີຍ, ຈົ່ງຟັງ! ຮັບຮູ້ເທີ້ນວ່າອັນໃດຈະເກີດຂຶ້ນແກ່ພວກເຂົາ. 19ຈົ່ງຟັງເທີ້ນ, ແຜ່ນດິນໂລກເອີຍ!
ເບິ່ງແມ, ເຮົາກຳລັງຈະນຳເອົາໄພພິບັດມາຍັງປະຊາຊົນເຫລົ່ານີ້—ຜົນແຫ່ງຄວາມຄິດທັງຫລາຍຂອງພວກເຂົາ.
ພວກເຂົາບໍ່ເຊື່ອຟັງຖ້ອຍຄຳຂອງເຮົາ ຫລືບັນຍັດຂອງເຮົາ, ແຕ່ພວກເຂົາພັດປະຕິເສດເສຍ.”
20“ກຳຍານທີ່ຂຶ້ນມາຈາກເມືອງເຊບາ ຈະເປັນປະໂຫຍດອັນໃດແກ່ເຮົາ? ຫລືກິ່ນຫອມທັງຫລາຍຈາກເມືອງໄກມາໃຫ້ເຮົາ ເພື່ອຫຍັງ?
ເຄື່ອງເຜົາບູຊາທັງຫລາຍຂອງເຈົ້າ ຍັງບໍ່ເປັນທີ່ຍອມຮັບສຳລັບເຮົາເອງ, ຫລືສັດບູຊາຂອງເຈົ້າ ກໍບໍ່ເປັນທີ່ພໍໃຈເຮົາ. 21ດັ່ງນັ້ນ
ພຣະຢາເວກກ່າວວ່າດັ່ງນີ້ວ່າ, ‘ເບິ່ງແມ, ເຮົາກຳລັງຈະວາງເຄື່ອງສະດຸດໄວ້, ໃຫ້ຄົນເຫລົ່ານີ້ຕຳສະດຸດ—ທັງພໍ່ ແລະ
ລູກຊາຍທັງຫລາຍຂອງພວກເຂົາ. ທັງຜູ້ພັກອາໄສ ແລະ ເພື່ອນບ້ານກໍຈະຈິບຫາຍຄືກັນ.” 22ພຣະຢາເວຊົງກ່າວວ່າ, ‘ເບິ່ງແມ,
ປະຊາຊົນກຳລັງມາຈາກປະເທດທາງທິດເໜືອ. ເພາະວ່າປະຊາຊາດຍິ່ງໃຫຍ່ຊາດໜຶ່ງຖືກປຸກລະດົມ ໃຫ້ມາຈາກສ່ວນໄກສຸດຂອງແຜ່ນດິນ.
23ພວກເຂົາທັງຫລາຍຖືຫນ້າທະນູ ແລະ ຫອກທັງຫລາຍ. ພວກເຂົາໂຫດຮ້າຍ ແລະຂາດຄວາມເມດຕາ.
ສຽງມ້າຂອງພວກເຂົາເໝືອນກັບສຽງຄື້ນທະເລ ແລະພວກເຂົາກຳລັງຂີ່ມ້າຕຽມພ້ອມເໝືອນທະຫານຮົບເສິກ,
ລູກສາວແຫ່ງຊີໂອນເອີຍ.’” 24ເຮົາໄດ້ຍິນຂ່າວກ່ຽວກັບພວກເຂົາເຫລົ່ານັ້ນ. ມືທັງຫລາຍຂອງເຮົາກໍອ່ອນເພຍລົງ.
ຄວາມຢ້ານກົວໄດ້ມາຄອບງຳພວກເຮົາ ເໝືອນຜູ້ຍິງຈະອອກລູກ.
25ຢ່າຍ່າງອອກໄປໃນທົ່ງນາເຫລົ່ານັ້ນ ຫລືຍ່າງໄປຕາມຖະໜົນຕ່າງໆ ເພາະບັນດາດາບຂອງສັດຕູ ແລະ
ຄວາມຢ້ານກົວກໍມີຢູ່ທຸກດ້ານ.” 26ລູກສາວຂອງໄພ່ພົນຂອງເຮົາເອີຍ, ຈົ່ງນຸ່ງເຄື່ອງໄວ້ທຸກ ແລະ
ກິ້ງເກືອກຢູ່ໃນຂີ້ເທົ່າໄຟຂອງການເຜົາສົບລູກໂທນຂອງເຈົ້າ. ຈົ່ງຮ້ອງໄຫ້ດ້ວຍຄວາມຂົມຂື່ນທີ່ສຸດສຳລັບເຈົ້າເອງ,
ເພາະວ່າຜູ້ທຳລາຍຈະເຂົ້າໂຈມຕີໃນທັນທີທັນໃດ.
27“ເຮົາໄດ້ສ້າງເຈົ້າ, ເຢເຣມີຢາເອີຍ, ເປັນຜູ້ທົດລອງທ່າມກາງໄພ່ພົນຂອງເຮົາ ເໝືອນກັບການທົດລອງໂລຫະ, ເພື່ອພວກເຈົ້າຈະໄດ້ກວດສອບ
ແລະ ທົດລອງທາງທັງຫລາຍຂອງພວກເຂົາ. 28ພວກເຂົາທັງໝົດເປັນປະຊາຊົນທີ່ດື້ດ້ານ, ຜູ້ທີ່ທຽວໄປທົ່ວ ເພື່ອປັ້ນປ່ວນຄົນອື່ນ.
ພວກເຂົາຫົວແຂງເໝືອນທອງຄຳ ແລະເຫລັກກ້າ, ປະພຶດຊົ່ວຊ້າທັງນັ້ນ. 29ເຄື່ອງເປົ່າລົມຂອງພວກເຂົາ
ເປົ່າຢ່າງດຸເດືອດດ້ວຍໄຟທີ່ເຜົາຜານພວກເຂົາ; ເຫລັກກໍຖືກຫລອມໃນແປວໄຟ. ແຕ່ກໍບໍ່ມີປະໂຫຍດ,
ເພາະຄວາມຊົ່ວກໍຍັງບໍ່ໄດ້ສູນຫາຍໄປເລີຍ. 30ພວກເຂົາຈະຖືກເອີ້ນວ່າເງິນໃຊ້ບໍ່ໄດ້, ເພາະພຣະຢາເວໄດ້ຊົງປະຖິ້ມພວກເຂົາແລ້ວ.”

7 1ພຣະທຳຈາກພຣະຢາເວໄດ້ມາຮອດເຢເຣມີຢາວ່າ, 2“ຈົ່ງໄປຢືນຢູ່ທີ່ປະຕູພຣະວິຫານຂອງພຣະຢາເວ
ແລ້ວຮ້ອງປະກາດຖ້ອຍຄຳຂອງພຣະຢາເວວ່າເຫລົ່ານີ້! ວ່າ, ‘ຈົ່ງຟັງພຣະທຳຂອງພຣະຢາເວ, ບັນດາຊາວຢູດາທັງປວງ,
ເຈົ້າທັງຫລາຍຜູ້ເຂົ້າປະຕູເຫລົ່ານີ້ມາ ເພື່ອຈະນະມັດສະການພຣະຢາເວ.

3ພຣະຢາເວຈອມໂຍທາ, ພຣະເຈົ້າຂອງຊາວອິດສະຣາເອນ, ຊົງກ່າວດັ່ງນີ້: ຈົ່ງປ່ຽນທາງທັງຫລາຍຂອງພວກເຈົ້າ ແລະ ກະທຳການດີ,
ແລ້ວເຮົາຈະໃຫ້ພວກເຈົ້າອາໄສຢູ່ໃນທີ່ນີ້ຕໍ່ໄປ. 4ຢ່າໃຫ້ຕົວພວກເຈົ້າເຊື່ອຄຳຕົວະເຫລົ່ານີ້ທີ່ວ່າ, “ພຣະວິຫານຂອງພຣະຢາເວ!
ພຣະວິຫານຂອງພຣະຢາເວ! ພຣະວິຫານຂອງພຣະຢາເວ.”
5ເພາະວ່າຖ້າພວກເຈົ້າປ່ຽນທາງທັງຫລາຍຂອງພວກເຈົ້າຢ່າງຈິງຈັງ ແລະເຮັດການດີ; ຖ້າເຈົ້າໃຫ້ຄວາມຍຸດຕິທຳລະຫວ່າງມະນຸດ
ແລະເພື່ອບ້ານຂອງຕົນຢ່າງເຕັມທີ່—6ຖ້າເຈົ້າບໍ່ຂົ່ມເຫັງຄົນທີ່ອາໄສຢູ່ໃນແຜ່ນດິນ, ພ້ອມທັງລູກກຳພ້າ, ຫລືແມ່ຫມ້າຍ
ແລະເຮັດໃຫ້ເລືອດຜູ້ບໍ່ມີຄວາມຜິດຕ້ອງລັ່ງອອກໃນສະຖານທີ່ສັກສິດນີ້, ແລະບໍ່ຕິດຕາມບັນດາພະອື່ນໆ ໄປໃຫ້ເປັນອັນຕະລາຍຕໍ່ພວກເຈົ້າເອງ
—7ແລ້ວເຮົາຈະໃຫ້ພວກເຈົ້າອາໄສຢູ່ໃນທີ່ນີ້ຕໍ່ໄປ, ໃນດິນແດນທີ່ເຮົາໄດ້ຍົກໃຫ້ບັນພະບູລຸດຂອງພວກເຈົ້າຕັ້ງແຕ່ໂບຮານ
ແລະຕະຫລອດໄປເປັນນິດນັ້ນ.
8ເບິ່ງແມ! ພວກເຈົ້າກຳລັງໄວ້ໃຈໃນຄຳຕົວະທັງຫລາຍ ທີ່ບໍ່ໄດ້ຊ່ວຍເຈົ້າເລີຍ. 9ເຈົ້າຈະລັກສິ່ງຂອງ, ຂ້າຄົນ, ແລະລ່ວງປະເວນີຫລື?
ເຈົ້າຈະສາບານດ້ວຍຄຳບໍ່ຈິງ ແລະຖວາຍບູຊາແກ່ພະບາອານ ແລະຂາບໄຫວ້ພະອື່ນໆ ທີ່ພວກເຈົ້າທັງຫລາຍບໍ່ຮູ້ຈັກຫລື?
10ແລ້ວເຈົ້າກໍມາຢືນຢູ່ຕໍ່ຫນ້າເຮົາໃນພຣະວິຫານຂອງເຮົາແຫ່ງນີ້ ຊຶ່ງເອີ້ນອອກນາມຊື່ຂອງເຮົາແລ້ວກໍເວົ້າວ່າ,
“ພວກເຮົາທັງຫລາຍໄດ້ຮັບການຊ່ວຍກູ້ແລ້ວ.” ດັ່ງນັ້ນເຈົ້າສາມາດເຮັດສິ່ງ ທີ່ຫນ້າກຽດຫນ້າຊັງເຫລົ່ານັ້ນທັງຫມົດອີກຫລື? 11ໃນພຣະວິຫານ,
ຊຶ່ງເອີ້ນອອກນາມຊື່ຂອງເຮົາ, ໄດ້ກາຍເປັນຖ້ຳຂອງພວກໂຈນ ໃນສາຍຕາຂອງພວກເຈົ້າໄປແລ້ວຫລື? ແຕ່ນີ້ນະ, ຕົວເຮົາໄດ້ເຫັນເອງ—
ນີ້ເປັນຄຳປະກາດຂອງພຣະຢາເວ.’
12‘ດັ່ງນັ້ນຈົ່ງໄປຍັງສະຖານທີ່ຂອງເຮົາຊຶ່ງເຄີຍຢູ່ໃນເມືອງຊີໂລ, ບ່ອນທີ່ເຮົາໄດ້ອະນຸຍາດໃຫ້ຊື່ຂອງເຮົາຢູ່ທີ່ນັ້ນແຕ່ຕອນເລີ່ມຕົ້ນ,
ແລະຈົ່ງເບິ່ງສິ່ງທີ່ເຮົາໄດ້ກະທຳຕໍ່ສະຖານທີ່ນັ້ນ ຍ້ອນຄວາມຊົ່ວຮ້າຍຂອງອິດສະຣາເອນໄພ່ພົນຂອງເຮົາ. 13ດັ່ງນັ້ນບັດນີ້,
ການທີ່ພວກເຈົ້າທັງຫລາຍໄດ້ເຮັດສິ່ງປວງທັງສິ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາໄດ້ເວົ້າກັບພວກເຈົ້າຫລາຍເທື່ອຫລາຍທີແລ້ວກໍດີ,
ແຕ່ພວກເຈົ້າກໍຍັງບໍ່ຍອມຟັງ. ເຮົາໄດ້ເອີ້ນພວກເຈົ້າ, ແຕ່ພວກເຈົ້າກໍບໍ່ຕອບ. 14ດ້ວຍເຫດນີ້, ສິ່ງທີ່ເຮົາໄດ້ເຮັດຕໍ່ເມືອງຊີໂລນັ້ນ,
ເຮົາຈະເຮັດຕໍ່ພຣະວິຫານນີ້ບ່ອນທີ່ເຮົາໄດ້ເອີ້ນນາມຊື່ຂອງເຮົາ, ວິຫານຊຶ່ງພວກເຈົ້າໄດ້ວາງໃຈນັ້ນ,
ສະຖານທີ່ຊຶ່ງເຮົາຍົກໃຫ້ບັນພະບູລຸດທັງຫລາຍ ຂອງພວກເຈົ້າ. 15ເພາະເຮົາຈະຂັບໄລ່ພວກເຈົ້າອອກໄປ ຈາກສາຍພຣະເນດຂອງເຮົາ
ເຫມືອນຢ່າງທີ່ເຮົາໄດ້ໄລ່ບັນດາຍາດພີ່ນ້ອງຂອງພວກເຈົ້າໄປ, ຄືບັນດາເຊື້ອສາຍທັງຫມົດຂອງຊາວເອຟຣາອິມ.’
16ສ່ວນເຈົ້າ, ເຢເຣມີຢາເອີຍ, ຢ່າອ້ອນວອນສຳລັບຊົນຊາດນີ້, ແລະຢ່າຮ້ອງໄຫ້ໂອຍຄາງໂສກເສົ້າ ຫລື ຢ່າອ້ອນວອນໃນນາມຂອງພວກເຂົາ,
ແລະຢ່າຂໍຮ້ອງເຮົາເພື່ອຕົວເຈົ້າເອງ, ເພາະວ່າເຮົາຈະບໍ່ຟັງເຈົ້າ. 17ເຈົ້າບໍ່ເຫັນຫລືວ່າ
ພວກເຂົາທັງຫລາຍກຳລັງເຮັດອັນໃດໃນເມືອງທັງຫລາຍຂອງຢູດາ ແລະຕາມຖະຫນົນໃນນະຄອນເຢຣູຊາເລັມ?
18ພວກເດັກນ້ອຍກໍກຳລັງເກັບຟືນ ແລະພວກພໍ່ທັງຫລາຍກໍກຳລັງດັງໄຟ! ແລະພວກຜູ້ຍິງກໍກຳລັງນວດແປ້ງ
ເພື່ອເຮັດເຂົ້າຫນົມຫວານຖວາຍແກ່ເຈົ້າຍິງແຫ່ງຟ້າ ແລະເທເຄື່ອງດື່ມຖວາຍແກ່ພະອື່ນໆ ດັ່ງນັ້ນພວກເຂົາຈະກວນໃຫ້ເຮົາໃຈຮ້າຍ.
19ພວກເຂົາກຳລັງກວນໂມໂຫເຮົາແທ້ໆ ຫລື? —ນີ້ເປັນຄຳປະກາດຂອງພຣະຢາເວ—ບໍ່ແມ່ນກວນໂມໂຫພວກເຂົາເອງ,
ເພື່ອໃຫ້ພວກເຂົາໄດ້ຮັບຄວາມອັບອາຍຫລື? 20ດ້ວຍເຫດນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, ‘ເບິ່ງແມ, ຄວາມຮ້າຍ
ແລະຄວາມໂມໂຫອັນຮຸນແຮງຂອງເຮົາຈະເທລົງໃສ່ສະຖານທີ່ນີ້, ທັງຄົນ ແລະສັດ, ຕົ້ນໄມ້ຢູ່ຕາມທົ່ງ ແລະເຄື່ອງປູກເທິງແຜ່ນດິນ.
ມັນຈະລຸກໄຫມ້ເຜົາຜານເສຍ ແລະຈະມອດບໍ່ໄດ້.’
21ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນກ່າວດັ່ງນີ້ວ່າ, ‘ຈົ່ງເພີ່ມເຄື່ອງເຜົາບູຊາ ທັງຕົວເຂົ້າກັບເຄື່ອງບູຊາຂອງເຈົ້າ ແລະ
ຊີ້ນຈາກພວກເຂົາ. 22ເພາະເມື່ອເຮົາໄດ້ນຳບັນພະບູລຸດຂອງພວກເຈົ້າອອກມາຈາກປະເທດເອຢິບນັ້ນ, ເຮົາບໍ່ໄດ້ຮຽກຮ້ອງອັນໃດຈາກພວກເຂົາ.
ເຮົາບໍ່ໄດ້ໃຫ້ຄຳສັ່ງພວກເຂົາກ່ຽວກັບເຄື່ອງເຜົາບູຊາ ແລະເຄື່ອງບູຊາ. 23ເຮົາພຽງແຕ່ໃຫ້ຄຳສັ່ງນີ້ເທົ່ານັ້ນວ່າ, “ຈົ່ງຟັງສຽງຂອງເຮົາ,
ແລະເຮົາຈະເປັນພຣະເຈົ້າຂອງເຈົ້າ ແລະ ເຈົ້າຈະໄດ້ເປັນໄພ່ພົນຂອງເຮົາ. ດັ່ງນັ້ນ ຈົ່ງດຳເນີນໃນທາງທັງຫລາຍທີ່ເຮົາກຳລັງບັນຊາເຈົ້າ,
ເພື່ອເຈົ້າຈະໄດ້ຢູ່ເຢັນເປັນສຸກ."
24ແຕ່ພວກເຂົາບໍ່ເຊື່ອຟັງ ຫລືເອົາໃຈໃສ່ເລີຍ. ພວກເຂົາມີແຕ່ປະພຶດໄປຕາມແຜນການຄວາມດື້ດ້ານ ຂອງຈິດໃຈຊົ່ວຂອງພວກເຂົາ, ສະນັ້ນ
ພວກເຂົາຈຶ່ງຍ່າງຖອຍຫລັງ, ບໍ່ຍ່າງໄປຫນ້າ. 25ຕັ້ງແຕ່ມື້ທີ່ບັນພະບູລຸດຂອງພວກເຈົ້າອອກຈາກແຜ່ນດິນເອຢິບຈົນເຖິງທຸກມື້ນີ້,
ເຮົາໄດ້ໃຊ້ບັນດາພວກຜູ້ປະກາດພຣະທັມຂອງເຮົາ, ໄປຫາພວກເຈົ້າຢູ່ສະເຫມີ. 26ແຕ່ພວກເຈົ້າບໍ່ເຊື່ອຟັງ. ພວກເຂົາບໍ່ເອົາໃຈໃສ່ເລີຍ.
ພວກເຂົາແຮງຍິ່ງເປັນຄົນດື້ດ້ານ. ພວກເຈົ້າໄດ້ປະພຶດຊົ່ວ ກວ່າບັນພະບູລຸດຂອງພວກເຈົ້າອີກ.’
27ດ້ວຍເຫດນີ້ ຈົ່ງປະກາດຖ້ອຍຄຳເຫລົ່ານີ້ສູ່ພວກເຂົາ, ແຕ່ພວກເຂົາຈະບໍ່ຟັງ. ຈົ່ງປະກາດສິ່ງເຫລົ່ານີ້ແກ່ພວກເຂົາ,
ແຕ່ພວກເຂົາຈະບໍ່ຍອມຕອບເຈົ້າ. 28ຈົ່ງເວົ້າແກ່ພວກເຂົາວ່າ ນີ້ເປັນຊົນຊາດທີ່ບໍ່ເຊື່ອຟັງສຽງຂອງພຣະຢາເວພຣະເຈົ້າຂອງເຂົາ ແລະ
ບໍ່ຍອມຮັບເອົາການຕັກເຕືອນ. ຄວາມສັດຊື່ຈະສູນຫາຍ ແລະ ຖືກຕັດຂາດຈາກປາກພວກເຂົາແລ້ວ.
29ຈົ່ງຕັດຜົມຂອງເຈົ້າອອກ ແລະແຖຫົວຂອງເຈົ້າ, ແລະແກວ່ງຜົມຂອງເຈົ້າຖິ້ມໄປ. ຈົ່ງຮ້ອງໄຫ້ບົດເພງອາໄລສົບເທິງທີ່ໂລ່ງ.
ເພາະວ່າພຣະຢາເວໄດ້ຊົງປະຕິເສດ ແລະໄດ້ຊົງປະຖິ້ມຄົນຮຸ່ນນີ້ດ້ວຍຄວາມຮ້າຍຂອງພຣະອົງແລ້ວ.
30ເພາະເຊື້ອສາຍຂອງຢູດາໄດ້ເຮັດຄວາມຊົ່ວຮ້າຍໃນສາຍຕາຂອງເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—
ພວກເຂົາໄດ້ເອົາສິ່ງທີ່ເຮົາກຽດຊັງມາວາງໄວ້ໃນວິຫານ ຊຶ່ງເອີ້ນອອກນາມຊື່ຂອງເຮົາ, ເພື່ອເຮັດໃຫ້ມີມົນທິນ.
31ແລ້ວພວກເຂົາໄດ້ສ້າງສະຖານທີ່ສູງຂອງໂຕເຟັດ ໄວ້ໃນຮ່ອມພູເບັນຮິນໂນມ. ພວກເຮົາໄດ້ເຮັດສິ່ງນີ້ເພື່ອຈະໄດ້ເຜົາບູຊາລູກຊາຍ
ແລະລູກຍິງທັງຫລາຍຂອງພວກເຂົາດ້ວຍໄຟ—ເປັນສິ່ງທີ່ເຮົາ ແລະບໍ່ເຄີຍສັ່ງ, ແລະບໍ່ເຄີຍນຶກໃຫ້ເຂົາກະທຳຢ່າງນີ້ເລີຍ. 32ດັ່ງນັ້ນ ເບິ່ງແມ,


generated on Tue Jun 17 19:01:42 2025

ເວລານັ້ນຈະມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອເຂົາຈະບໍ່ໄດ້ເອີ້ນວ່າທີ່ນັ້ນອີກວ່າໂຕເຟັດ ຫລື ຮ່ອມພູເບັນຮິນໂນມ ອີກຕໍ່ໄປ.
ມັນຈະເອີ້ນວ່າຮ່ອມພູແຫ່ງການຂ້າຟັນກັນ; ເພາະວ່າພວກເຂົາຈະໄດ້ຝັງສົບທັງຫລາຍໃນໂຕເຟັດ ຈົນກວ່າບໍ່ມີບ່ອນຝັງເຫລືອແລ້ວ.
33ບັນດາປະຊາຊົນນີ້ຈະກາຍເປັນອາຫານຂອງບັນດານົກໃນທ້ອງຟ້າ ແລະຂອງສັດປ່າເທິງແຜ່ນດິນໂລກ ຈະບໍ່ມີໃຜຂັບໄລ່ພວກມັນໄປເສຍໄດ້.
34ເຮົາຈະເຮັດໃຫ້ເປັນຈຸດຈົບຂອງເມືອງຕ່າງໆ ຂອງຢູດາ ແລະຖະຫນົນຕ່າງໆ ຂອງນະຄອນເຢຣູຊາເລັມ, ສຽງຂອງຄວາມມ່ວນຊື່ນຍິນດີ
ແລະສຽງສຳລານຂອງພວກເຈົ້າບ່າວ ແລະພວກເຈົ້າສາວຈະບໍ່ມີ, ເພາະແຜ່ນດິນນັ້ນຈະກາຍເປັນທີ່ຮ້າງເປົ່າ.”

 generated on Tue Jun 17 19:01:42 2025

8 [1]"ໃນເທື່ອນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—ພວກເຂົາຈະນຳກະດູກຂອງບັນດາກະສັດຢູດາ
ແລະກະດູກພວກເຈົ້ານາຍທັງຫລາຍຂອງຢູດາ, ກະດູກປະໂລຫິດ ແລະກະດູກຜູ້ປະກາດພຣະທັມ,
ແລະກະດູກທັງຫລາຍຂອງຊາວເມືອງເຢຣູຊາເລັມມາຈາກອຸບໂມງຝັງສົບ.[2]ແລ້ວພວກເຂົາຈະກະຈາຍກະດູກເຫລົ່ານັ້ນ ອອກຕໍ່ຫນ້າດວງຕາເວັນ
ແລະດວງເດືອນ ແລະດວງດາວທັງຫມົດໃນທ້ອງຟ້າ; ສິ່ງຕ່າງໆໃນທ້ອງຟ້າເຫລົ່ານີ້ທີ່ພວກເຂົາຕິດຕາມ ແລະ ບົວລະບັດ,
ຊຶ່ງພວກເຂົາໄດ້ຕິດຕາມ ແລະໄດ້ສະແຫວງຫາ, ແລະທີ່ພວກເຂົາໄດ້ນະມັດສະການ. ກະດູກເຫລົ່ານີ້ຈະບໍ່ມີໃຜຮວບຮວມ ຫລືຝັງອີກເທື່ອ.
ພວກເຂົາຈະເປັນເຫມືອນຂີ້ສັດຢູ່ຕາມພື້ນດິນ.[3]ຕາມສະຖານທີ່ທັງຫມົດທີ່ເຮົາໄດ້ຂັບໄລ່ພວກເຂົາໄປ, ພວກເຂົາຈະເລືອກເອົາຄວາມຕາຍ
ແທນທີ່ຈະເລືອກເອົາມີຊີວິດສຳລັບພວກເຂົາ, ທຸກຄົນທີ່ເຫລືອຢູ່ຈາກຊົນຊາດຊົ່ວຮ້າຍນີ້—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.

[4]ດັ່ງນັ້ນ ຈົ່ງເວົ້າກັບພວກເຂົາທັງຫລາຍວ່າ, 'ພຣະຢາເວກ່າວດັ່ງນີ້ວ່າ: ເມື່ອໃຜກໍຕາມທີ່ລົ້ມລົງ ເຂົາຈະບໍ່ລຸກຂຶ້ນອີກບໍ?
ຖ້າຜູ້ຫນຶ່ງຜູ້ໃດກໍຕາມຫລົງຫາຍໄປ, ເຂົາຈະບໍ່ຖອຍຫລັງກັບມາບໍ?[5]ເປັນຫຍັງຊົນຊາດນີ້, ເຢຣູຊາເລັມ,
ຈຶ່ງໄດ້ຫັນໄປໃນຄວາມບໍ່ຊື່ສັດຢູ່ເລື້ອຍໆ? ພວກເຂົາຍຶດການຫລອກລວງໄວ້ຫມັ້ນ ແລະປະຕິເສດບໍ່ຍອມຫັນກັບ.
[6]ເຮົາໄດ້ຕັ້ງໃຈ ແລະຄອຍຖ້າຟັງ, ແຕ່ພວກເຂົາກໍໄດ້ເວົ້າສິ່ງທີ່ຖືກຕ້ອງ; ບໍ່ມີຄົນໃດກັບໃຈຈາກຄວາມຊົ່ວຂອງຕົນ, ບໍ່ມີໃຜທີ່ກ່າວວ່າ,
'ຂ້ານ້ອຍໄດ້ເຮັດຫຍັງໄປແລ້ວ?' ທຸກຄົນຫັນໄປຕາມທາງທີ່ຕົນປາດຖະຫນາ, ເຫມືອນກັບມ້າແລ່ນເຂົ້າໄປໃນສົງຄາມ.
[7]ເຖິງວ່ານົກຍາງເທິງຟ້າຍັງຮູ້ຈັກເວລາກຳນົດຂອງມັນ; ແລະນົກເຂົາ, ນົກນາງແອ່ນ, ແລະນົກກຽນ ພວກມັນໄດ້ອົບພະຍົບຕາມເວລາຂອງມັນ,
ແຕ່ປະຊາຊົນຂອງເຮົາ ບໍ່ຮູ້ຈັກກົດຫມາຍຂອງພຣະຢາເວ.
[8]ເຈົ້າຈະເວົ້າໄດ້ຢ່າງໃດວ່າ, 'ເຮົາມີປັນຍາ ເພາະວ່າພຣະບັນຍັດຂອງພຣະຢາເວກໍຢູ່ກັບເຮົາ?' ທີ່ຈິງແລ້ວ, ເບິ່ງແມ!
ບົກຂຽນຂອງພວກອາລັກໄດ້ຫລອກຫລວງເຫລົ່າພວກອາລັກໄດ້ສ້າງຖ້ອຍຄຳຫລອກຫລວງ.[9]ພວກຄົນມີປັນຍາຈະຕ້ອງອັບອາຍ.
ພວກເຂົາຈະຕົກໃຈຢ້ານ ແລະຖືກຈັບຕົວໄປ. ເບິ່ງແມ! ພວກເຂົາໄດ້ປະຕິເສດ ພຣະທັມຂອງພຣະຢາເວ, ດັ່ງນັ້ນ
ປັນຍາຂອງເຂົາພວກເຂົາກໍບໍ່ມີປະໂຫຍດ.[10]ເພາະສະນັ້ນ ເຮົາຈະໃຫ້ເມຍຂອງພວກເຂົາຕົກໄປເປັນຂອງຄົນອື່ນ
ແລະໃຫ້ໄຮ່ນາທັງຫລາຍຂອງພວກເຂົາຕົກແກ່ຄົນເຫລົ່ານັ້ນຜູ້ທີ່ຈະຍຶດເອົາ ເພາະວ່າຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດເຖິງຄົນທີ່ໃຫຍ່ໂຕທີ່ສຸດ,
ທຸກຄົນໂລບຢາກໄດ້ກຳໄລ! ຕັ້ງແຕ່ຜູ້ປະກາດພຣະທັມ ເຖິງປະໂລຫິດ, ທຸກຄົນກໍເຮັດການສໍ້ໂກງ.
[11]ພວກເຂົາໄດ້ຮັກສາບາດແຜແຫ່ງປະຊາຊົນຂອງເຮົາແຕ່ພຽງເລັກນ້ອຍ, ກ່າວວ່າ 'ສັນຕິສຸກ, ສັນຕິສຸກ,' ໃນເມື່ອບໍ່ມີສັນຕິສຸກເລີຍ.
[12]ພວກເຂົາອັບອາຍຫລືບໍ່ເມື່ອຍເຂົາເຮັດການຫນ້າກຽດຊັງ? ພວກເຂົາອັບອາຍເລີຍ; ພວກເຂົາບໍ່ຮູ້ຈັກອັບອາຍເລີຍ! ເພາະສະນັ້ນ
ພວກເຂົາຈະລົ້ມລົງທ່າມກາງພວກທີ່ລົ້ມແລ້ວ, ພວກເຂົາຈະລົ້ມຄວ້ຳລົງເມື່ອເຮົາລົງໂທດເຂົາທັງຫລາຍ, ພຣະຢາເວກ່າວດັ່ງນີ້ແຫລະ.
[13]ເຮົາຈະເອົາພວກເຂົາອອກໄປຢ່າງສິ້ນເຊີງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຄືອອະງຸ່ນຈະບໍ່ມີຫມາກ ຫລື ຕົ້ນຫມາກເດື່ອເທດບໍ່ມີຜົນ.
ໃບກໍຈະຫ່ຽວແຫ້ງໄປ, ແລະ ສິ່ງໃດທີ່ເຮົາໃຫ້ພວກເຂົາກໍຈະສູນຫາຍໄປຈາກພວກເຂົາ."
[14]ເປັນຫຍັງເຮົາຈຶ່ງນັ່ງຢູ່ທີ່ນີ້? ຈົ່ງພາກັນມາ; ໃຫ້ພວກເຮົາ ເຂົ້າໄປໃນບັນດາຫົວເມືອງທີ່ມີປ້ອມ, ແລະ ເຮົາຈະຢູ່ມິດໆທີ່ນັ້ນໃນຄວາມຕາຍ.
ເພາະພຣະຢາເວ ພຣະເຈົ້າຂອງເຮົາຈະຊົງໃຫ້ເຮົານັ່ງມິດ. ພຣະອົງຈະໃຫ້ເຮົາດື່ມຢາພິດ, ເພາະພວກເຮົາໄດ້ເຮັດບາບຕໍ່ພຣະອົງ.
[15]ພວກເຮົາຫວັງຫາສັນຕິສຸກ, ແຕ່ບໍ່ມີຄວາມດີຫຍັງມາເລີຍ. ພວກເຮົາຫວັງຫາເວລາຮັກສາໃຫ້ດີ, ແຕ່ເບິ່ງແມ, ມີແຕ່ຄວາມຄວາມຕື່ນຕົກໃຈ.
[16]ສຽງຄຶກຄະນອງແຫ່ງມ້າຂອງລາວກໍໄດ້ຍິນມາຈາກເມືອງດານ. ແຜ່ນດິນທັງຫມົດກໍຫວັ່ນໄຫວ ດ້ວຍສຽງຮ້ອງຂອງກອງທັບມ້າຂອງລາວ.
ເພາະພວກມັນກັບມາ ແລະກິນແຜ່ນດິນ ແລະສິ່ງທັງປວງທີ່ຢູ່ໃນນັ້ນຈົນຫມົດທັງເມືອງ, ທັງເມືອງແລະຜູ້ທີ່ອາໄສຢູ່ໃນເມືອງ.[17]ເພາະ ເບິ່ງແມ,
ເຮົາກຳລັງສົ່ງງູເຂົ້າມາທ່າມກາງພວກເຈົ້າ, ຄືງູພິດທັບທາງ ຊຶ່ງຈະຜູກມັດດ້ວຍມົນບໍ່ໄດ້ ພວກມັນຈະກັດພວກເຈົ້າທັງຫລາຍ—
ພຣະຢາເວປະກາດດັ່ງນີ້ແຫລະ."
[18]ຄວາມທຸກເສົ້າໂສກຂອງຂ້ານ້ອຍບໍ່ມີທີ່ສິ້ນສຸດ, ແລະຈິດໃຈຂອງຂ້ານ້ອຍກໍປ່ວຍຢູ່.[19]ເບິ່ງແມ!
ມີສຽງກິດຮ້ອງຂອງລູກສາວແຫ່ງປະຊາຊົນຂອງເຮົາ ຈາກດິນແດນຫ່າງໄກ! ພຣະຢາເວບໍ່ໄດ້ສະຖິດໃນຊີໂອນແລ້ວບໍ?
ກະສັດຂອງເມືອງນັ້ນບໍ່ຢູ່ໃນນັ້ນແລ້ວບໍ? ເປັນຫຍັງພວກເຂົາຈຶ່ງຍົວະໃຫ້ເຮົາໂກດຮ້າຍດ້ວຍຮູບເຄົາລົບຂອງພວກເຂົາ
ແລະດ້ວຍພະຕ່າງດ້າວຂອງພວກເຂົາ?
[20]ລະດູກ່ຽວກໍຜ່ານໄປ, ລະດູແລ້ງກໍສິ້ນສຸດລົງແລ້ວ. ແຕ່ເຮົາທັງຫລາຍກໍບໍ່ລອດພົ້ນ.
[21]ເຮົາຮູ້ສຶກເຈັບປວດເພາະບາດແຜແຫ່ງລູກສາວປະຊາຊົນຂອງເຮົາ. ເຮົາຈຶ່ງເຈັບປວດ. ເຮົາເສົ້າຫມອງຫົວໃຈໃນສິ່ງຕ່າງໆທີ່ຫນ້າຢ້ານກົວ
ທີ່ໄດ້ເກີດຂຶ້ນກັບນາງ; ເຮົາຢ້ານກົວ.[22]ບໍ່ມີຫວ້ານຢາຮັກໃນກີເລອາດຫລື? ບໍ່ມີແພດຫມໍຮັກສາພະຍາດບ່ອນນັ້ນຫລື?
ເປັນຫຍັງການຮັກສາລູກສາວແຫ່ງປະຊາຊົນຂອງເຮົາຈຶ່ງບໍ່ໄດ້ຜົນ?

 generated on Tue Jun 17 19:01:42 2025

9 [1]ໂອ ຖ້າພຽງຫົວຂອງຂ້ານ້ອຍເປັນແຫລ່ງນ້ຳ, ແລະດວງຕາຂອງຂ້ານ້ອຍເປັນບໍ່ນ້ຳພຸແຫ່ງນ້ຳຕາກໍຈະດີ!
ເພື່ອຂ້ານ້ອຍຈະໄດ້ຮ້ອງໄຫ້ທັງກາງເວັນ ແລະກາງຄືນ ເພາະລູກສາວຂອງປະຊາຊົນຂອງຂ້ານ້ອຍທີ່ຖືກຂ້າ. [2]ໂອ
ຖ້າຂ້ານ້ອຍມີບ່ອນພັກສຳລັບຄົນເດີນທາງ ຢູ່ໃນຖິ່ນແຫ້ງແລ້ງກັນດານກໍຈະດີ, ເພື່ອຂ້ານ້ອຍຈະໄດ້ໄປຈາກຊົນຊາດຂອງຂ້ານ້ອຍ
ແລະໄປໃຫ້ພົ້ນຈາກພວກເຂົາເສຍ, ເພາະພວກເຂົາທັງຫມົດເປັນຄົນລ່ວງປະເວນີ, ແລະເປັນຫມູ່ຄົນທີ່ມັກທໍລະຍົດ! [3]ພຣະຢາເວຊົງກ່າວດັ່ງນີ້ວ່າ,
"ພວກເຂົາງໍລີ້ນຂອງຕົນເຫມືອນກັບຄັນທະນູ ເພື່ອກ່າວຄວາມບໍ່ຈິງ, ແຕ່ບໍ່ແມ່ນໂດຍສັດຈະຂອງພວກເຂົາທີ່ແຂງແຮງຂຶ້ນໃນແຜ່ນດິນ
ເພາະພວກເຂົາອອກຈາກຄວາມຊົ່ວຢ່າງນີ້ໄປສູ່ຄວາມຊົ່ວເຊັ່ນນັ້ນ. ພວກເຂົາບໍ່ຮູ້ຈັກເຮົາ."

[4]ຂໍໃຫ້ພວກເຈົ້າ, ແຕ່ລະຄົນລະວັງເພື່ອນບ້ານຂອງຕົນ ແລະຢ່າວາງໃຈໃນພີ່ນ້ອງຄົນໃດເລີຍ. ເພາະວ່າພີ່ນ້ອງທຸກຄົນຈະເປັນຄົນຫລອກລວງ,
ແລະເພື່ອນບ້ານທຸກຄົນຈະທຽວໄປເປັນຄົນນິນທາໃສ່ຮ້າຍຜູ້ອື່ນ. [5]ແຕ່ລະຄົນຈະຫລອກລວງເພື່ອນບ້ານຂອງຕົນ
ແລະບໍ່ມີໃຜຈະເວົ້າຄວາມຈິງຈັກຄົນດຽວ. ບັນດາລີ້ນຂອງພວກເຂົາສອນໃຫ້ເວົ້າຂີ້ຕົວະ. ພວກເຂົາເມື່ອຍລ້າໃນການເຮັດຄວາມຊົ່ວຊ້າ.
[6]ພວກເຈົ້າອາໄສຢູ່ທ່າມກາງການຫລອກລວງ; ໃນທ່າມກາງການຫລອກລວງຂອງພວກເຂົາ ປະຕິເສດທີ່ຈະຮູ້ຈັກເຮົາ—
ນີ້ເປັນຄຳປະກາດຂອງພຣະຢາເວ."
[7]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, "ເບິ່ງແມ, ເຮົາຈະຫລອມພວກເຂົາ ແລະທົດລອງພວກເຂົາ, ເຮົາຈະເຮັດຢ່າງອື່ນໄດ້ແນວໃດ,
ເພາະວ່າພວກເຂົາເປັນໄພ່ພົນຂອງເຮົາ? [8]ລີ້ນຂອງພວກເຂົາຄົມເຫມືອນລູກທະນູ; ພວກເຂົາເວົ້າໃນສິ່ງທີ່ບໍ່ສັດຊື່.
ດ້ວຍປາກທັງຫລາຍຂອງພວກເຂົາ ພວກເຂົາກ່າວເລື່ອງສັນຕິກັບເພື່ອນບ້ານຂອງຕົນ, ແຕ່ໃນໃຈຂອງພວກເຂົາໄດ້ວາງແຜນການຄອຍຖ້າດັກຢູ່.
[9]ຄວນທີ່ເຮົາຈະບໍ່ລົງໂທດພວກເຂົາ—ນີ້ເປັນຄຳປະກາດຂອງພຣະຢາເວ—ແລະບໍ່ຄວນ ຫລືທີ່ເຮົາຈະແກ້ແຄ້ນຊົນຊາດທີ່ເປັນຢ່າງນີ້?
[10]ຂ້ານ້ອຍຈະຮ້ອງເພງແຫ່ງການໂສກເສົ້າ ແລະຄວນຄາງສຳລັບພູເຂົາທັງຫລາຍ, ແລະເພງງານສົບຈະຖືກຮ້ອງເພາະທົ່ງຫຍ້າເຫລົ່ານັ້ນ
ເພາະວ່າມັນຖືກເຜົາເສຍ. ບໍ່ມີຜູ້ໃດຜ່ານໄປມາ ບໍ່ໄດ້ຍິນສຽງສັດລ້ຽງຮ້ອງ. ທັງນົກໃນອາກາດ ແລະ ສັດໄດ້ຫນີໄປເສຍແລ້ວ. [11]ດັ່ງນັ້ນ
ເຮົາຈະເຮັດໃຫ້ເຢຣູຊາເລັມເປັນກອງສິ່ງຫັກພັງ, ເປັນບ່ອນຢູ່ຂອງຫມາປ່າ. ເຮົາຈະເຮັດໃຫ້ຫົວເມືອງຕ່າງໆຂອງຢູດາ ເປັນບ່ອນຮ້າງເປົ່າ
ບໍ່ມີຄົນອາໄສ." [12]ໃຜເປັນຄົນມີປັນຍາພຽງພໍທີ່ຈະເຂົ້າໃຈຄວາມນີ້ໄດ້? ມີຜູ້ໃດທີ່ປາກຂອງພຣະຢາເວໄດ້ກ່າວແກ່ຕົນ,
ແລະລາວຈຶ່ງປະກາດຄວາມນັ້ນໄດ້? ເຫດໃດແຜ່ນດິນຈຶ່ງພັງທະລາຍ ແລະຖືກເຜົາເສຍເຫມືອນຖິ່ນແຫ້ງແລ້ງກັນດານທີ່ບໍ່ມີໃຜຜ່ານໄປມາ?
[13]ພຣະຢາເວກ່າວວ່າ, "ເພາະພວກເຂົາທັງຫລາຍໄດ້ປະຖິ້ມບັນຍັດຂອງເຮົາ ຊຶ່ງເຮົາໄດ້ຕັ້ງໄວ້ຕໍ່ຫນ້າພວກເຂົາ,
ເພາະພວກເຂົາບໍ່ໄດ້ເຊື່ອຟັງສຽງຂອງເຮົາ ຫລືດຳເນີນຕາມນັ້ນ. [14]ເພາະພວກເຂົາໄດ້ດຳເນີນຕາມໃຈດື້ດ້ານຂອງຕົນເອງ
ແລະໄດ້ຕິດຕາມພວກພະບາອານເຫມືອນຢ່າງທີ່ບັນພະບູລຸດໄດ້ສັ່ງສອນພວກເຂົາໃຫ້ເຮັດ.
[15]ສະນັ້ນ ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ຈຶ່ງກ່າວວ່າ, 'ເບິ່ງແມ, ເຮົາກຳລັງຈະໃຫ້ຊົນຊາດນີ້ກິນເຄືອເຂົາຮໍ
ແລະໃຫ້ດື່ມນ້ຳທີ່ເປັນພິດ. [16]ເຮົາຈະກະຈາຍພວກເຂົາໄປທ່າມກາງຊົນຊາດ ທີ່ຕົວເຂົາເອງ ຫລືບັນພະບູລຸດຂອງພວກເຂົາບໍ່ຮູ້ຈັກ.
ເຮົາຈະສົ່ງດາບໃຫ້ໄລ່ຕາມພວກເຂົາທັງຫລາຍ ຈົນກວ່າເຮົາຈະໄດ້ເຜົາຜານພວກເຂົາຈົນຫມົດສິ້ນ."
[17]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, "ຈົ່ງພິຈາລະນາເບິ່ງ ແລະ ເອີ້ນນາງຮ້ອງໄຫ້ມາ; ຈົ່ງໃຫ້ພວກນາງມາ.
ໃຫ້ຄົນໄປນຳພວກຜູ້ຍິງມືອາຊີບໃນການສົ່ງສຽງຮ້ອງຄາງໃຫ້ພວກນາງມາ. [18]ປ່ອຍໃຫ້ພວກນາງຮີບມາ ແລະ ຮ້ອງຄາງເພື່ອເຮົາທັງຫລາຍ,
ເພື່ອດວງຕາຂອງພວກນາງຈະມີນ້ຳຕາໄຫລ ແລະ ຫນັງຕາຂອງເຮົາຈະມີນ້ຳຕາໄຫລອອກມາ.
[19]ເພາະໄດ້ຍິນສຽງຮ້ອງຄາງຈະໄດ້ຍິນໃນຊີໂອນ, 'ພວກເຮົາຈິບຫາຍແລ້ວ. ພວກເຮົາສຸດແສນຈະອັບອາຍ, ເພາະພວກເຮົາຕ້ອງປະຖິ້ມແຜ່ນດິນ
ເພາະພວກເຂົາໄດ້ທຳລາຍບ່ອນຢູ່ອາໄສທັງຫລາຍຂອງພວກເຮົາລົງ.' [20]ດັ່ງນັ້ນພວກຜູ້ຍິງເອີຍ, ຈົ່ງຟັງພຣະທັມຂອງພຣະຢາເວ
ໃຫ້ໃຈຈົດຈໍໃນພຣະທັມຈາກປາກຂອງພຣະອົງ. ແລ້ວຈົ່ງສອນບົດເພັງງານສົບແກ່ລູກສາວຂອງພວກເຈົ້າ, ແລະ
ຈົ່ງສອນບົດເພງແຫ່ສົບແກ່ເພື່ອນບ້ານຜູ້ຍິງແຕ່ລະຄົນ.
[21]ເພາະຄວາມຕາຍໄດ້ເຂົ້າມາທາງປ່ອງຢ້ຽມທັງຫລາຍຂອງເຮົາ; ມັນເຂົ້າມາໃນວັງທັງຫລາຍຂອງເຮົາ. ມັນທຳລາຍພວກເດັກນ້ອຍ
ຈາກຂ້າງນອກ, ແລະຕັດພວກຄົນຫນຸ່ມ ອອກເສຍຈາກລານເມືອງ. [22]ຈົ່ງປະກາດວ່າ, 'ນີ້ເປັນຄຳປະກາດຂອງພຣະຢາເວ—
ບັນດາສົບຂອງຄົນຈະກອງລະເນລະນາດເຫມືອນຂີ້ສັດຕາມພື້ນທົ່ງນາ ແລະເຫມືອນຟ່ອນເຂົ້າທີ່ລົ້ມຕາມຫລັງຜູ້ກ່ຽວ,
ແລະບໍ່ມີຜູ້ໃດຈະເກັບຮວບຮວມພວກມັນ.'"
[23]ພຣະຢາເວກ່າວດັ່ງນີ້ວ່າ, "ຢ່າໃຫ້ຜູ້ມີປັນຍາອວດໃນສະຕິປັນຍາຂອງລາວ, ຫລືຢ່າໃຫ້ຊາຍສະກັນອວດໃນຄວາມເຂັ້ມແຂງຂອງລາວ.
ຢ່າໃຫ້ຄົນຮັ່ງມີອວດໃນຄວາມລ້ຳລວຍຂອງລາວ. [24]ເພາະຖ້າຜູ້ໃດອວດໃນສິ່ງໃດ, ກໍໃຫ້ເປັນຢ່າງນີ້, ຄືການທີ່ຕົນເຂົ້າໃຈ ແລະ ຮູ້ຈັກເຮົາ
ເພາະວ່າເຮົາຄືພຣະຢາເວ, ຜູ້ຊົງສະແດງພັນທະສັນຍາທີ່ສັດຊື່, ຄວາມຍຸດຕິທຳ ແລະຄວາມຊອບທຳໃນໂລກ.
ເພາະສິ່ງເຫລົ່ານີ້ແຫລະທີ່ເຮົາພໍໃຈ—ນີ້ເປັນຄຳປະກາດຂອງພຣະຢາເວ."
[25]"ເບິ່ງແມ, ວັນເຫລົ່ານັ້ນກຳລັງມາເຖິງແລ້ວ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເມື່ອເຮົາຈະລົງໂທດບັນດາຜູ້ທີ່ຮັບພິທີຕັດພຽງເພາະເນື້ອຫນັງຂອງພວກເຂົາ. [26]ເຮົາຈະລົງໂທດຄົນເອຢິບ ແລະຄົນຢູດາ, ຄົນເອໂດມ,
ປະຊາຊົນຂອງອຳໂມນ, ຄົນໂມອາບ ແລະປະຊາຊົນທຸກຄົນທີ່ຕັດຜົມເທິງຫົວຂອງພວກເຂົາຈົນສັ້ນ.
ເພາະປະຊາຊາດເຫລົ່ານີ້ທັງຫມົດບໍ່ໄດ້ຮັບພິທີຕັດ, ແລະ ບັນດາເຊື້ອສາຍຂອງອິດສະຣາເອນກໍບໍ່ໄດ້ຮັບພິທີຕັດທາງໃຈ."

10 [1]ຈົ່ງຟັງພຣະທັມຊຶ່ງພຣະຢາເວຊົງກ່າວກັບພວກເຈົ້າ, ໂອ ເຊື້ອສາຍຂອງອິດສະຣາເອນເອີຍ.[2]ພຣະຢາເວຊົງກ່າວດັ່ງນີ້ວ່າ,
'ຢ່າຮຽນຮູ້ການດຳເນີນຊີວິດຕາມຢ່າງບັນດາປະຊາຊາດ ຫລືຢ່າຢ້ານກົວເພາະຫມາຍສຳຄັນຂອງທ້ອງຟ້າ,
ຕາມທີ່ບັນດາປະຊາຊາດຢ້ານກົວນັ້ນ.

[3]ເພາະທຳນຽມຂອງສາສະຫນາຂອງປະຊາຊົນເຫລົ່ານີ້ກໍບໍ່ມີປະໂຫຍດ. ພວກເຂົາຕັດຕົ້ນໄມ້ຕົ້ນຫນຶ່ງຈາກປ່າ, ແລະ
ຊ່າງສີມືໄດ້ແກະສະລັກໄມ້.[4]ພວກເຂົາທັງຫລາຍກໍເອົາເງິນ ແລະ ທອງຄຳມາປະດັບ. ພວກເຂົາຕອກໄວ້ແຫນ້ນດ້ວຍຄ້ອນ ແລະຕະປູ
ດັ່ງນັ້ນມັນກໍບໍ່ລົ້ມລົງມາ.[5]ສິ່ງທີ່ພວກເຂົາເຮັດດ້ວຍມືຂອງພວກເຂົາກໍເຫມືອນຫຸ່ນໄລ່ກາທັງຫລາຍທີ່ຢູ່ໃນສວນຫມາກແຕງ, ເພາະພວກມັນ,
ຄືກັນ, ບໍ່ສາມາດເວົ້າໄດ້, ແລະພວກມັນຕ້ອງຖືກຍ້າຍໄປ, ເພາະມັນຍ່າງບໍ່ໄດ້. ຢ່າຢ້ານພວກມັນເລີຍ, ເພາະພວກມັນບໍ່ສາມາດເຮັດຮ້າຍໄດ້,
ແລະພວກມັນກໍບໍ່ສາມາດເຮັດດີໄດ້ເຊັ່ນກັນ."
[6]ບໍ່ມີຜູ້ໃດເຫມືອນພຣະອົງເລີຍ, ຂ້າແດ່ພຣະຢາເວ. ພຣະອົງຊົງຍິ່ງໃຫຍ່ ແລະພຣະນາມຂອງພຣະອົງມີຣິດອຳນາດຫລາຍ.
[7]ຂ້າແດ່ກະສັດແຫ່ງບັນດາປະຊາຊາດ, ຜູ້ໃດຈະບໍ່ຢຳເກງພຣະອົງ? ເພາະພຣະອົງສົມຄວນໄດ້ຮັບຄວາມຢຳເກງ,
ເພາະບໍ່ມີຜູ້ໃດເຫມືອນພຣະອົງ ໃນທ່າມກາງບັນດານັກປາດຂອງປະຊາຊາດທັງຫລາຍ ຫລື ໃນບັນດາຣາຊະອານາຈັກທັງຫມົດຂອງພວກເຂົາ.
[8]ພວກເຂົາເປັນຄືກັນ, ພວກເຂົາເປັນເຫມືອນສັດເດຍລະສານ ແລະໂງ່ຈ້າ, ບັນດາສິດຂອງຮູບເຄົາລົບ ຊຶ່ງບໍ່ມີປະໂຫຍດອັນໃດ ເປັນພຽງໄມ້.
[9]ພວກເຂົານຳເອົາເຄື່ອງເງິນທຸບດ້ວຍຄ້ອນມາຈາກເມືອງຕາຊິດ, ແລະເອົາທອງຄຳມາຈາກເມືອງອຸຟາດ, ທີ່ເຮັດຂຶ້ນຈາກຜົນງານຂອງຊ່າງສີມື,
ແລະເປັນຜົນນ້ຳມືຂອງຊ່າງຕີຄຳ. ເສື້ອຜ້າຂອງຮູບເຄົາລົບນັ້ນສີຄາມ ແລະສີມ່ວງ. ສິ່ງເຫລົ່ານີ້ທັງຫມົດເປັນຜົນງານຂອງຊ່າງຊຳນານ.
[10]ແຕ່ພຣະຢາເວຊົງເປັນພຣະເຈົ້າອົງທ່ຽງແທ້. ພຣະອົງຊົງເປັນພຣະເຈົ້າຜູ້ຊົງພຣະຊົນ ແລະເປັນພຣະມະຫາກະສັດເນື່ອງນິດ.
ເມື່ອຊົງພຣະພິໂລດ ແຜ່ນດິນກໍຫວັ່ນໄຫວ, ແລະບັນດາປະຊາຊາດຈະບໍ່ສາມາດທົນຕໍ່ຄວາມໂກດຮ້າຍຂອງພຣະອົງ.
[11]ພວກເຈົ້າຈົ່ງເວົ້າກັບພວກເຂົາທັງປວງດັ່ງນີ້ວ່າ, "ບັນດາພະຜູ້ທີ່ບໍ່ໄດ້ຊົງສ້າງຟ້າສະຫວັນ ແລະແຜ່ນດິນໂລກຈະພິນາດໄປຈາກແຜ່ນດິນໂລກ
ແລະຈາກພາຍໃຕ້ຟ້າສະຫວັນເຫລົ່ານີ້."[12]ແຕ່ພຣະອົງຊົງສ້າງໂລກດ້ວຍລິດເດດຂອງພຣະອົງ,
ແລະຊົງສະຖາປະນາໂລກໄວ້ດ້ວຍພຣະສະຕິປັນຍາຂອງພຣະອົງ, ແລະດ້ວຍຄວາມເຂົ້າໃຈຂອງພຣະອົງຊົງຂຶງຟ້າສະຫວັນອອກ.
[13]ພຣະສຸລະສຽງຂອງພຣະອົງກໍຊົງເຮັດໃຫ້ເກີດສຽງນ້ຳຄະນອງໃນທ້ອງຟ້າ,
ແລະພຣະອົງຊົງເຮັດໃຫ້ມີຫມອກລອຍຂຶ້ນຈາກທີ່ສຸດປາຍແຜ່ນດິນ. ພຣະອົງຊົງເຮັດໃຫ້ຟ້າແລບເພື່ອຝົນ
ແລະຊົງນຳລົມມາຈາກພຣະຄັງຂອງພຣະອົງ.
[14]ມະນຸດທຸກຄົນໄດ້ກາຍເປັນຄົນໂງ່, ຂາດຄວາມຮູ້. ຊ່າງຕີເຫລັກທຸກຄົນຈະໄດ້ອັບອາຍ ເພາະຮູບເຄົາລົບຂອງເຂົາ.
ເພາະຮູບເຄົາລົບຫລໍ່ຂອງເຂົາເປັນຂອງບໍ່ຈິງ; ແລະບໍ່ມີຊີວິດໃນພວກມັນ.[15]ພວກມັນເປັນຂອງບໍ່ມີຄ່າ,
ແລະເປັນຜົນງານຂອງພວກທີ່ມັກເຍາະເຍີ້ຍ; ພວກມັນຈະຕ້ອງພິນາດເມື່ອເຖິງເວລາການລົງໂທດ ຂອງພວກມັນ.[16]ແຕ່ພຣະອົງ,
ຜູ້ຊົງເປັນສ່ວນມໍຣະດົກຂອງຢາໂຄບ, ບໍ່ເຫມືອນສິ່ງເຫລົ່ານີ້, ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ.
ອິດສະຣາເອນເປັນເຜົ່າທີ່ເປັນມໍຣະດົກຂອງພຣະອົງ; ພຣະຢາເວຈອມໂຍທາ ຄືພຣະນາມຂອງພຣະອົງ.
[17]ຈົ່ງເກັບເຄື່ອງຂອງ ຂອງພວກເຈົ້າ ແລະອອກຈາກແຜ່ນດິນ, ພວກເຈົ້າປະຊາຊົນທັງຫລາຍທີ່ອາໄສຢູ່ພາຍໃຕ້ການຍຶດຄອງ.
[18]ເພາະພຣະຢາເວກ່າວດັ່ງນີ້ວ່າ, "ເບິ່ງແມ, ເຮົາຈະໂຍນພວກທີ່ອາໄສໃນແຜ່ນດິນອອກໄປເສຍໃນເວລານີ້.
ເຮົາຈະເຮັດໃຫ້ພວກເຂົາເກີດຄວາມທຸກໃຈ, ແລະພວກເຂົາຈະໄດ້ເຫັນວ່າມັນເປັນດັ່ງນັ້ນແທ້."
[19]ວິບັດແກ່ຂ້ານ້ອຍ! ເພາະກະດູກຂອງຂອງຂ້ານ້ອຍແຕກ, ບາດແຜຂອງຂ້ານ້ອຍກໍຕິດເຊື້ອ. ດັ່ງນັ້ນຂ້ານ້ອຍໄດ້ກ່າວວ່າ, "ແທ້ຈິງ
ນີ້ເປັນຄວາມທຸກໃຈ ແລະຂ້ານ້ອຍຈະຕ້ອງທົນເອົາ."[20]ເຕັນຂອງຂ້ານ້ອຍກໍຖືກທຳລາຍ ແລະເຊືອກເຕັນຂອງຂ້ານ້ອຍກໍຂາດເປັນສອງທ່ອນ.
ພວກເຂົາໄດ້ນຳເອົາລູກໆຂອງຂ້ານ້ອຍໄປຈາກຂ້ານ້ອຍຫມົດ, ແລະບໍ່ມີພວກເຂົາອີກແລ້ວ. ບໍ່ມີຜູ້ໃດທີ່ຈະກາງເຕັນໃຫ້ຂ້ານ້ອຍອີກ ຫລື
ແຂວນຜ້າກັ້ງຂອງຂ້ານ້ອຍໃຫ້.
[21]ເພາະວ່າພວກຜູ້ລ້ຽງແກະກໍໂງ່ຈ້າ ແລະພວກເຂົາບໍ່ໄດ້ຊອກຫາພຣະຢາເວ; ເພາະສະນັ້ນ ພວກເຂົາຈະບໍ່ໄດ້ຈະເລີນຂຶ້ນ,
ແລະຝູງແກະທັງຫລາຍຂອງພວກເຂົາກໍຈະກະຈັດກະຈາຍໄປ.[22]ລາຍງານຂ່າວຊ່າລືກໍໄດ້ມາເຖິງແລ້ວ, "ເບິ່ງແມ! ມັນກຳລັງມາ,
ແຜ່ນດິນໄຫວຢ່າງຮຸນແຮງ ກໍກຳລັງມາຈາກແຜ່ນດິນທາງເຫນືອ ມາເຮັດໃຫ້ເມືອງຕ່າງໆຂອງຢູດາເປັນທີ່ຮ້າງເປົ່າ,
ໃຫ້ເປັນບ່ອນຢູ່ຂອງຫມາປ່າ."
[23]ຂ້າແດ່ພຣະຢາເວ, ຂ້ານ້ອຍຮູ້ແລ້ວວ່າ, ທາງຂອງມະນຸດບໍ່ໄດ້ຂຶ້ນຢູ່ກັບຕົວເຂົາ. ບໍ່ມີບຸກຄົນໃດຈະດຳເນີນໄປໄດ້ໂດຍບາດຢ່າງຂອງຕົນເອງ.
[24]ຂ້າແດ່ພຣະຢາເວ, ຂໍຊົງໂຜດຕີສອນຂ້ານ້ອຍດ້ວຍຄວາມຍຸດຕິທຳ, ບໍ່ແມ່ນດ້ວຍຄວາມໂກດຮ້າຍຂອງພຣະອົງ
ຢ້ານວ່າພຣະອົງຈະຊົງທຳລາຍຂ້ານ້ອຍ.[25]ຂໍພຣະອົງຊົງຖອກຄວາມໂກດຮ້າຍຂອງພຣະອົງເຫນືອເຫລົ່າປະຊາຊາດທີ່ບໍ່ຮູ້ຈັກພຣະອົງ
ແລະເຫນືອບັນດາຄອບຄົວຜູ້ບໍ່ອອກພຣະນາມຂອງພຣະອົງ. ເພາະພວກເຂົາທັງຫລາຍໄດ້ເຜົາຜານຢາໂຄບ ແລະພວກເຂົາໄດ້ກືນເພິ່ນເສຍ
ແລະໄດ້ທຳລາຍເຂົາເສຍ ແລະເຮັດໃຫ້ບ່ອນຢູ່ອາໄສຂອງເພິ່ນຖືກຖິ້ມຮ້າງ.

 generated on Tue Jun 17 19:01:42 2025

11 [1]ພຣະທັມຊຶ່ງມາຈາກພຣະຢາເວເຖິງເຢເຣມີຢາວ່າ,[2]“ຈົ່ງຟັງຖ້ອຍຄຳແຫ່ງພັນທະສັນຍານີ້ເຖີດ,
ແລະຈົ່ງປະກາດແກ່ພວກເຂົາແຕ່ລະຄົນໃນຢູດາ ແລະບັນດາຜູ້ທີ່ອາໄສຢູ່ນະຄອນເຢຣູຊາເລັມ.

[3]ຈົ່ງກ່າວແກ່ພວກເຂົາວ່າ, ‘ພຣະຢາເວພຣະເຈົ້າຂອງຊາວອິດສະຣາເອນ ກ່າວດັ່ງນີ້ວ່າ:
ໃຫ້ຄຳສາບແຊ່ງຕົກຢູ່ກັບຄົນທີ່ບໍ່ເຊື່ອຟັງຖ້ອຍຄຳໃນພັນທະສັນຍານີ້ເທີ້ນ.
[4]ນີ້ເປັນພັນທະສັນຍາທີ່ເຮົາໄດ້ບັນຊາແກ່ບັນພະບູລຸດຂອງພວກເຈົ້າໃຫ້ຮັກສາ ໃນມື້ທີ່ເຮົາໄດ້ນຳພວກເຂົາອອກມາຈາກແຜ່ນດິນເອຢິບ,
ຈາກເຕົາໄຟສຳລັບຫລອມເຫລັກ. ເຮົາໄດ້ບອກແກ່ພວກເຂົາວ່າ, “ຈົ່ງຟັງສຽງຂອງເຮົາ ແລະຈົ່ງເຮັດທຸກຢ່າງທີ່ເຮົາໄດ້ສັ່ງພວກເຈົ້າໄວ້,
ເພື່ອພວກເຈົ້າຈະເປັນປະຊາຊົນຂອງເຮົາ ແລະເຮົາຈະເປັນພຣະເຈົ້າຂອງພວກເຈົ້າ.”[5]“ຈົ່ງເຊື່ອຟັງເຮົາ ເພື່ອເຮົາຈະຢືນຢັນຕາມຄຳປະຕິຍານ
ຊຶ່ງເຮົາໄດ້ສາບານໄວ້ກັບເຫລົ່າບັນພະບຸລຸດຂອງພວກເຈົ້າ, ຄຳສາບານທີ່ວ່າເຮົາຈະໃຫ້ແຜ່ນດິນຊຶ່ງມີນ້ຳນົມ
ແລະນ້ຳເຜິ້ງໄຫລບໍລິບູນແກ່ພວກເຂົາ, ຢ່າງທີ່ພວກເຈົ້າຢູ່ທຸກວັນນີ້.’” ແລ້ວຂ້ານ້ອຍ, ເຢເຣມີຢາ, ຈຶ່ງໄດ້ເວົ້າຕອບແລະໄດ້ກ່າວວ່າ,
“ໂດຍຂ້າແດ່ພຣະເຢວາ, ຂ້ານ້ອຍຈະເວົ້າດັ່ງນັ້ນ!”
[6]ພຣະຢາເວໄດ້ກ່າວກັບຂ້ານ້ອຍວ່າ, “ຈົ່ງປ່າວປະກາດເຖິງສິ່ງທັງຫມົດເຫລົ່ານີ້ໃນເມືອງຕ່າງໆຂອງຢູດາ
ແລະຕາມຫົນທາງຕ່າງໆໃນນະຄອນເຢຣູຊາເລັມ. ຈົ່ງປະກາດວ່າ, ‘ຈົ່ງຟັງບັນດາຖ້ອຍຄຳແຫ່ງພັນທະສັນຍານີ້ ແລະໃຫ້ປະພຶດຕາມ.
[7]ເພາະເຮົາໄດ້ກ່າວຕັກເຕືອນຢ່າງເດັດຂາດຕໍ່ບັນດາບັນພະບູລຸດຂອງພວກເຈົ້າ ຈາກມື້ນັ້ນທີ່ເຮົາໄດ້ນຳພວກເຂົາອອກຈາກເອຢິບ
ຈົນມາເຖິງທຸກມື້ນີ້, ຕັກເຕືອນພວກເຂົາຊ້ຳແລ້ວຊ້ຳອີກ ແລະກ່າວວ່າ, “ຈົ່ງຟັງສຽງຂອງເຮົາ.’”[8]ແຕ່ພວກເຂົາທຸກຄົນບໍ່ເຊື່ອຟັງ ຫລືງ່ຽງຫູຟັງ.
ແຕ່ລະຄົນກໍດຳເນີນຕາມຄວາມດື້ດ້ານແຫ່ງຈິດໃຈອັນຊົ່ວຮ້າຍຂອງພວກເຂົາ. ດັ່ງນັ້ນ ເຮົາຈຶ່ງນຳຄຳສາບແຊ່ງທຸກສິ່ງ
ຕາມພັນທະສັນຍານີ້ທີ່ເຮົາໄດ້ບັນຊາ ມາຕົກເທິງພວກເຂົາ. ແຕ່ປະຊາຊົນກໍບໍ່ໄດ້ເຊື່ອຟັງ.”
[9]ຕໍ່ມາ ພຣະຢາເວຊົງກ່າວກັບຂ້ານ້ອຍວ່າ, “ມີການສົມຄົບຄິດກະບົດທ່າມກາງເຫລົ່າຄົນຢູດາ ແລະບັນດາຜູ້ທີ່ອາໄສຢູ່ໃນນະຄອນເຢຣູຊາເລັມ.
[10]ພວກເຂົາຫັນກັບຄືນໄປຫາຄວາມຜິດບາບຂອງບັນພະບູລຸດຮຸ່ນທຳອິດຂອງພວກເຂົາ, ຜູ້ທີ່ບໍ່ຍອມເຮັດຕາມຖ້ອຍຄຳຂອງເຮົາ,
ຜູ້ທີ່ໄດ້ຕິດຕາມຂາບໄຫວ້ພະອື່ນໆ ໄປເພື່ອບົວລະບັດພະເຫລົ່ານັ້ນ. ເຊື້ອສາຍຂອງອິດສະຣາເອນ
ແລະເຊື້ອສາຍຂອງຢູດາໄດ້ຫັກພັນທະສັນຍາຂອງເຮົາ ທີ່ໄດ້ເຮັດກັບບັນພະບູລຸດຂອງພວກເຂົາ.
[11]ດັ່ງນັ້ນ ພຣະຢາເວຈຶ່ງຕັກເຕືອນດັ່ງນີ້ວ່າ, ‘ເບິ່ງແມ, ເຮົາຈະນຳໄພພິບັດ ຈາກບ່ອນທີ່ພວກເຂົາບໍ່ສາມາດຫນີພົ້ນໄດ້,
ແລ້ວພວກເຂົາຈະຮ້ອງຂໍໃຫ້ເຮົາຊ່ວຍເຫລືອ, ແຕ່ເຮົາຈະບໍ່ຟັງພວກເຂົາ.[12]ບັນດາເມືອງຕ່າງໆຂອງຢູດາ
ແລະບັນດາຜູ້ທີ່ອາໄສຢູ່ໃນນະຄອນເຢຣູຊາເລັມ ກໍຈະໄປຮ້ອງໄຫ້ຂໍຄວາມຊ່ວຍເຫລືອຈາກພະອື່ນໆທັງຫລາຍ ທີ່ພວກເຂົາຖວາຍບູຊາ,
ແຕ່ແນ່ນອນທີ່ດຽວວ່າພະເຫລົ່ານັ້ນຈະຊ່ວຍພວກເຂົາໃນເວລາຍາກລຳບາກຂອງພວກເຂົາບໍ່ໄດ້ເລີຍ.[13]ສຳລັບພວກເຈົ້າຢູດາເອີຍ,
ບັນດາພະທັງຫລາຍຂອງເຈົ້າໄດ້ເພີ່ມຂຶ້ນຫລາຍເທົ່າກັບບັນດາເມືອງຂອງພວກເຈົ້າ. ພວກເຈົ້າໄດ້ກໍ່ຕັ້ງແທ່ນບູຊາຖວາຍສິ່ງທີ່ຫນ້າອັບອາຍ,
ຈຳນວນຫລວງຫລາຍໃນນະຄອນເຢຣູຊາເລັມ, ຄືແທ່ນສຳລັບເຜົາເຄື່ອງຫອມຖວາຍແກ່ພະບາອານ, ຫລາຍທໍ່ກັບ ຫົນທາງຕ່າງໆໃນເມືອງນັ້ນ.
[14]ດັ່ງນັ້ນ ຕົວເຈົ້າເອງ, ເຢເຣມີຢາເອີຍ, ຈະຕ້ອງບໍ່ອ້ອນວອນເພື່ອປະຊາຊົນເຫລົ່ານີ້. ເຈົ້າຢ່າໄດ້ວິງວອນ ຫລື ອະທິຖານເພື່ອພວກເຂົາ
ເພາະເຮົາຈະບໍ່ຟັງ ໃນເວລາໄພພິບັດມາເຖິງພວກເຂົາ.[15]ເປັນຫຍັງຜູ້ເປັນທີ່ຮັກຂອງເຮົາ, ຄົນທີ່ໄດ້ເຮັດຄວາມຊົ່ວຮ້າຍຫລວງຫລາຍ,
ມາຢູ່ໃນວິຫານຂອງເຮົາ? ຊີ້ນສັດທີ່ບະບົນດ້ວຍການເຜົາບູຊາ ຂອງພວກເຈົ້າບໍ່ສາມາດຈະຊ່ວຍພວກເຈົ້າໄດ້.
ພວກເຈົ້າຍິນດີເພາະການກະທຳທັງຫລາຍທີ່ຊົ່ວຮ້າຍຂອງພວກເຈົ້າ.[16]ໃນອະດີດພຣະຢາເວໄດ້ຊົງເຄີຍເອີ້ນພວກເຈົ້າວ່າ ຕົ້ນກອກໃບຂຽວສົດ,
ທີ່ງົດງາມດ້ວຍຫມາກຜົນທີ່ຫນ້າຮັກ, ແຕ່ພຣະອົງຈະຊົງກໍ່ໄຟເຜົາມັນທີ່ຈະມີສຽງດັ່ງຢ່າງສະຫນັ່ນຂອງສຽງພາຍຸ;
ແລະງ່າທັງຫລາຍຂອງມັນແຕກຫັກຫມົດ.
[17]ເພາະພຣະຢາເວຈອມໂຍທາ, ຜູ້ໄດ້ຊົງປູກເຈົ້າ, ໄດ້ຊົງປະກາດຄວາມພິນາດໃຫ້ແກ່ພວກເຈົ້າ ເພາະຄວາມຊົ່ວຊ້າຊຶ່ງເຊື້ອສາຍອິດສະຣາເອນ
ແລະ ເຊື້ອສາຍຢູດາໄດ້ເຮັດ—ພວກເຂົາໄດ້ຍຸແຍ່ໃຫ້ເຮົາໃຈຮ້າຍ ດ້ວຍການເຜົາຖວາຍບູຊາແກ່ພະບາອານ.’”
[18]ພຣະຢາເວຊົງສະແດງແກ່ຂ້ານ້ອຍໃຫ້ກໍຮູ້ເຖິງສິ່ງເຫລົ່ານີ້ ດັ່ງນັ້ນຂ້ານ້ອຍຮູ້ຈັກພວກເຂົາ. ພຣະອົງຊົງ,
ພຣະຢາເວໄດ້ຊົງສະແດງໃຫ້ຂ້ານ້ອຍໄດ້ເຫັນການກະທຳທັງຫລາຍຂອງພວກເຂົາ.[19]ຂ້ານ້ອຍເປັນເຫມືອນລູກແກະຊຸ້ນໆໂຕຫນຶ່ງ
ຊຶ່ງຖືກພາມາເຖິງບ່ອນຂ້າ. ຂ້ານ້ອຍບໍ່ໄດ້ຮູ້ເລີຍວ່າ ພວກເຂົາໄດ້ວາງແຜນການຕໍ່ສູ້ຂ້ານ້ອຍເອງ, ໂດຍກ່າວວ່າ,
“ໃຫ້ເຮົາທຳລາຍຕົ້ນໄມ້ກັບຜົນຂອງມັນເສຍ! ໃຫ້ເຮົາຕັດລາວອອກເສຍຈາກແຜ່ນດິນຂອງຄົນເປັນ
ເພື່ອຊື່ຂອງລາວຈະບໍ່ເປັນທີ່ລະນຶກເຖິງອີກເລີຍ.”[20]ແຕ່ວ່າ ຂ້າແດ່ພຣະຢາເວຈອມໂຍທາ ຜູ້ຊົງພິພາກສາຢ່າງຊອບທຳ
ຜູ້ຊົງທົດລອງເບິ່ງທັງຄວາມຄິດ ແລະຈິດໃຈ. ຂ້ານ້ອຍໄດ້ເປັນພະຍານການແກ້ແຄ້ນຂອງພຣະອົງ ແກ່ພວກເຂົາ,
ເພາະຂ້ານ້ອຍໄດ້ມອບເລື່ອງຂອງຂ້ານ້ອຍໄວ້ກັບພຣະອົງແລ້ວ.
[21]ເພາະສະນັ້ນພຣະຢາເວຊົງກ່າວດັ່ງນີ້ ກ່ຽວກັບຄົນເມືອງ ອານາໂທດ ຜູ້ສະແຫວງຫາຊີວິດຂອງພວກເຈົ້າ, “ພວກເຂົາກ່າວວ່າ,
‘ຈົ່ງຢ່າປະກາດພຣະທັມໃນພຣະນາມຂອງພຣະຢາເວ, ຫລືບໍ່ດັ່ງນັ້ນເຈົ້າຈະຕ້ອງຕາຍດ້ວຍມືຂອງພວກເຮົາ.’[22]ເພາະສະນັ້ນ
ພຣະຢາເວຈອມໂຍທາກ່າວວ່າ, ‘ເບິ່ງແມ, ເຮົາກຳລັງຈະລົງໂທດພວກເຂົາທັງປວງ. ພວກຄົນຫນຸ່ມຈະຕາຍດ້ວຍດາບ. ບັນດາລູກຊາຍ
ແລະລູກສາວຂອງເຂົາຈະຕາຍດ້ວຍການອຶດຢາກອາຫານ.[23]ຈະບໍ່ມີເຫລືອຈັກຄົນດຽວ, ເພາະເຮົາຈະນຳຄວາມຮ້າຍມາສູ່ຄົນອານາໂທດ,
ຄືປີແຫ່ງການລົງໂທດພວກເຂົາ.'"

 generated on Tue Jun 17 19:01:42 2025

12 [1]ຂ້າແດ່ພຣະຢາເວ, ພຣະອົງກໍຊົງຊອບທຳ, ເມື່ອຂ້ານ້ອຍສູ້ຄະດີກັບພຣະອົງ. ຂ້ານ້ອຍຈະຕ້ອງຂໍສະເຫນີ
ເຫດຜົນທີ່ຈະຮ້ອງທຸກຕໍ່ພຣະອົງຢ່າງແນ່ນອນ: ເຫດໃດທາງຂອງຄົນຊົ່ວຈຶ່ງຈະປະສົບຄວາມສຳເລັດ?
ປະຊາຊົນທຸກຄົນທີ່ບໍ່ສັດຊື່ກໍປະສົບຜົນສຳເລັດ.[2]ພຣະອົງໄດ້ຊົງປູກພວກເຂົາທັງຫລາຍ ແລະພວກເຂົາກໍຢັ່ງຮາກລົງ. ພວກເຂົາງອກງາມຂຶ້ນ
ແລະເກີດຜົນ. ພຣະອົງຊົງຢູ່ໃກ້ປາກຂອງພວກເຂົາ, ແຕ່ໄກຈາກໃຈຂອງພວກເຂົາ.

[3]ຂ້າແດ່ພຣະຢາເວ, ແຕ່ພຣະອົງຊົງຮູ້ຈັກຂ້ານ້ອຍ. ພຣະອົງຊົງທອດພະເນດເຫັນຂ້ານ້ອຍ
ແລະຊົງທົດລອງຄວາມຄິດຂອງຂ້ານ້ອຍທີ່ມີຕໍ່ພຣະອົງ. ຂໍຊົງຍົກພວກເຂົາອອກມາເຫມືອນແກະສຳລັບການຂ້າ,
ແລະຕັ້ງພວກເຂົາໄວ້ຕ່າງຫາກເພື່ອມື້ຂ້າ.[4]ແຜ່ນດິນນີ້ຈະແຫ້ງແລ້ງໄປດົນເທົ່າໃດ,
ແລະຜັກຫຍ້າຕາມທົ່ງນາທຸກແຫ່ງຈະຫ່ຽວແຫ້ງໄປເພາະຄວາມຊົ່ວຮ້າຍຂອງຜູ້ອາໄສຢູ່ໃນນັ້ນອີກດົນເທົ່າໃດ? ບັນດາສັດປ່າ
ແລະນົກກໍໄດ້ຖືກກວາດໄປຫມົດສິ້ນ. ຄວາມຈິງແລ້ວ, ປະຊາຊົນກ່າວວ່າ, “ພຣະເຈົ້າບໍ່ຮູ້ວ່າຈະມີອັນໃດເກີດຂຶ້ນກັບພວກເຮົາທັງຫລາຍ.”
[5]ພຣະຢາເວໄດ້ກ່າວວ່າ, “ທີ່ຈິງແລ້ວ, ເຢເຣມີຢາເອີຍ, ຖ້າເຈົ້າໄດ້ແລ່ນດ້ວຍຕີນຂອງບັນດາທະຫານ
ແລະພວກເຂົາຍັງເຮັດໃຫ້ພວກເຈົ້າອິດເມື່ອຍຫມົດແຮງ, ແລ້ວເຈົ້າຈະແລ່ນແຂ່ງເອົາຊະນະກັບບັນດາມ້າທັງຫລາຍໄດ້ຢ່າງໃດ?
ຖ້າເຈົ້າລົ້ມລົງໃນບ່ອນທີ່ປອດໄພເຂດຊົນນະບົດ, ເຈົ້າຈະເຮັດຢ່າງໃດໃນດົງຟຸ່ມໄມ້ທັງຫລາຍຕາມລຸ່ມແມ່ນ້ຳຢໍແດນ?
[6]ເພາະວ່າແມ້ແຕ່ບັນດາພີ່ນ້ອງຂອງພວກເຈົ້າ ແລະຄອບຄົວເຊື້ອສາຍຂອງເຈົ້າກໍໄດ້ເຮັດການທໍລະຍົດຕໍ່ເຈົ້າ ແລະ
ໄດ້ໃສ່ຮ້າຍເຈົ້າດ້ວຍສຽງອັນດັງ. ຈົ່ງຢ່າວາງໃຈໃນພວກເຂົາ, ແມ້ແຕ່ທີ່ພວກເຂົາເວົ້າດ້ວຍຖ້ອຍຄຳດີໆ ກັບເຈົ້າ.
[7]ເຮົາໄດ້ປະຖິ້ມພຣະນິເວດຂອງເຮົາ; ເຮົາໄດ້ໂຍນຖິ້ມມໍຣະດົກຂອງເຮົາ. ເຮົາໄດ້ມອບປະຊາຊົນຜູ້ເປັນທີ່ຮັກໄວ້ໃນມືເຫລົ່າສັດຕູຂອງນາງ.
[8]ມໍຣະດົກຂອງເຮົາໄດ້ກາຍເປັນເຫມືອນໂຕສິງໃນຟຸ່ມໄມ້ສຳລັບເຮົາ; ນາງເປັ່ງສຽງຂອງນາງໃສ່ເຮົາ, ເພາະສະນັ້ນ ເຮົາຈຶ່ງກຽດຊັງນາງ.
[9]ຊັບສົມບັດທີ່ເປັນລາງວັນຂອງເຮົາ ໄດ້ກາຍເປັນນົກຕໍ ທີ່ນົກລ່າເຫຍື່ອທັງຫລາຍໄລ່ລ່າຢ່າງນັ້ນບໍ? ຈົ່ງໄປເຖາະ ແລະ
ຮວບຮວມສັດປ່າໃນທົ່ງທັງຫມົດ ແລະພາພວກມັນມາກິນນາງເສຍ.
[10]ຜູ້ລ້ຽງແກະເປັນຈຳນວນຫລາຍໄດ້ທຳລາຍສວນອະງຸ່ນຂອງເຮົາ. ພວກເຂົາໄດ້ຢຽບຢ່ຳແຜ່ນດິນສວນຂອງເຮົາລົງ;
ພວກເຂົາໄດ້ເຮັດໃຫ້ສວນທີ່ເຮົາພໍໃຈ ໃຫ້ກາຍເປັນຖິ່ນແຫ້ງແລ້ງກັນດານທີ່ຮົກຮ້າງ.[11]ພວກເຂົາໄດ້ເຮັດສວນຂອງເຮົາໃຫ້ຮົກຮ້າງ.
ເຮົາໂສກເສົ້າສຳລັບນາງ; ນາງໄດ້ຖືກປະໃຫ້ຮົກຮ້າງ. ແຜ່ນດິນທັງຫມົດກໍຖືກຖິ້ມໃຫ້ຮົກຮ້າງ, ເພາະທີ່ນັ້ນບໍ່ມີຜູ້ໃດເອົາໃຈໃສ່ເລື່ອງນັ້ນ.
[12]ພວກຜູ້ທຳລາຍໄດ້ມາຈາກບັນດາບ່ອນໂລ່ງໃນຖິ່ນແຫ້ງແລ້ງກັນດານ ເພາະວ່າແສງດາບຂອງພຣະຢາເວ
ຈະທຳລາຍຈາກປາຍແຜ່ນດິນນີ້ໄປເຖິງປາຍອີກຂ້າງຫນຶ່ງ. ບໍ່ມີສັນຕິພາບໃນແຜ່ນດິນສຳລັບສິ່ງທີ່ມີຊີວິດໃດໆເລີຍ.
[13]ພວກເຂົາທັງຫລາຍໄດ້ຫວ່ານເຂົ້າສາລີ ແຕ່ຈະກ່ຽວຟຸ່ມຫນາມ. ພວກເຂົາໄດ້ເຮັດວຽກຈົນອິດເມື່ອຍ ແຕ່ຈະບໍ່ໄດ້ກຳໄລຫຍັງເລີຍ.
ດັ່ງນັ້ນຈົ່ງອັບອາຍດ້ວຍຜົນການເກັບກ່ຽວຂອງເຈົ້າ ເພາະຄວາມໂກດຮ້າຍອັນຮ້ອນຮົນຂອງພຣະຢາເວ.”
[14]ພຣະຢາເວກ່າວດັ່ງນີ້ ຕໍ່ເພື່ອນບ້ານຂອງເຮົາ, ຄົນທີ່ຊົ່ວຮ້າຍໄດ້ແຕະຕ້ອງມໍຣະດົກຊຶ່ງເຮົາໄດ້ໃຫ້ອິດສະຣາເອນ
ປະຊາຊົນຂອງເຮົາສືບມໍຣະດົກນັ້ນວ່າ, “ເບິ່ງແມ, ເຮົາເປັນຜູ້ທີ່ຈະຖອນພວກເຂົາທັງຫລາຍ ຂຶ້ນຈາກແຜ່ນດິນຂອງພວກເຂົາ,
ແລະເຮົາຈະຖອນເຊື້ອສາຍຢູດາຈາກທ່າມກາງພວກເຂົາ.[15]ແລ້ວຫລັງຈາກທີ່ເຮົາໄດ້ຖອນບັນດາປະຊາຊາດເຫລົ່ານັ້ນຂຶ້ນແລ້ວ,
ສິ່ງນີ້ຈະເກີດຂຶ້ນທີ່ເຮົາຈະກັບມີຄວາມເມດຕາຕໍ່ພວກເຂົາອີກ; ເຮົາຈະນຳພວກເຂົາມາ—ແຕ່ລະຄົນມາຍັງມໍຣະດົກຂອງຕົນ ແລະ
ແຜ່ນດິນຂອງຕົນ.
[16]ສິ່ງນີ້ຈະເກີດຂຶ້ນຖ້າປະຊາຊາດເຫລົ່ານັ້ນຈະຮຽນຮູ້ທາງແຫ່ງປະຊາຊົນຂອງເຮົາ, ຄືປະຕິຍານໃນນາມຂອງເຮົາວ່າ,
‘ພຣະຢາເວຊົງພຣະຊົນຢູ່ແນ່ນອນສັນໃດ’ ເຫມືອນທີ່ພວກເຂົາໄດ້ສອນປະຊາຊົນຂອງເຮົາໃຫ້ປະຕິຍານໂດຍພະບາອານ
ແລ້ວພວກເຂົາຈະໄດ້ຮັບການສ້າງຂຶ້ນໄວ້ທ່າມກາງປະຊາຊົນຂອງເຮົາສັນນັ້ນ.[17]ແຕ່ຖ້າພວກເຂົາບໍ່ເຊື່ອຟັງ,
ແລ້ວເຮົາກໍຈະຖອນປະຊາຊາດນັ້ນອອກ. ມັນຈະຖືກຖອນອອກຢ່າງແນ່ນອນ ແລະຖືກທຳລາຍ—ນີ້ເປັນຄຳປະກາດຂອງພຣະຢາເວ.”

 generated on Tue Jun 17 19:01:42 2025

# 13

[1]ພຣະຢາເວຊົງກ່າວແກ່ຂ້ານ້ອຍດ້ວຍວ່າ, “ຈົ່ງໄປແລະຊື້ຜ້າປ່ານຄາດແອວມາຜືນຫນຶ່ງ ແລະໃຫ້ຄາດແອວຂອງເຈົ້າໄວ້,
ແຕ່ຢ່າຈຸ່ມນ້ຳກ່ອນ.”[2]ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ຊື້ຜ້າຄາດແອວຜືນຫນຶ່ງຕາມພຣະທັມຂອງພຣະຢາເວ ແລະຄາດແອວຂອງຂ້ານ້ອຍໄວ້.
[3]ແລ້ວພຣະທັມຂອງພຣະຢາເວມາເຖິງຂ້ານ້ອຍເທື່ອທີສອງ, ກ່າວວ່າ,[4]“ຈົ່ງເອົາຜ້າຄາດແອວຊຶ່ງເຈົ້າໄດ້ຊື້ມາ ຊຶ່ງໄດ້ຄາດຢູ່ທີ່ແອວຂອງເຈົ້າ,
ຈົ່ງລຸກຂຶ້ນແລະເດີນທາງໄປຍັງແມ່ນ້ຳເອຟຣາດ. ແລ້ວເຊື່ອງຜ້ານັ້ນໄວ້ໃນຫລືບຫີນແຫ່ງຫນຶ່ງ.”

[5]ດັ່ງນັ້ນ ຂ້ານ້ອຍກໍໄດ້ໄປ ແລະໄດ້ເຊື່ອງຜ້ານັ້ນໄວ້ຂ້າງແມ່ນ້ຳເອຟຣາດ ດັ່ງທີ່ພຣະຢາເວຊົງບັນຊາຂ້ານ້ອຍ.[6]ຕໍ່ມາອີກຫລາຍມື້,
ພຣະຢາເວຊົງກ່າວກັບຂ້ານ້ອຍວ່າ, “ຈົ່ງລຸກຂຶ້ນໄປຍັງແມ່ນ້ຳເອຟຣາດ. ໃຫ້ເອົາຜ້າຄາດແອວ ຊຶ່ງເຮົາໄດ້ສັ່ງເຈົ້າໃຫ້ເຊື່ອງໄວ້.”[7]ດັ່ງນັ້ນ
ຂ້ານ້ອຍກໍກັບໄປທີ່ແມ່ນ້ຳເອຟຣາດ ແລະໄດ້ຂຸດເອົາຜ້າຄາດແອວມາຈາກບ່ອນທີ່ຂ້ານ້ອຍໄດ້ເຊື່ອງໄວ້. ແຕ່ເບິ່ງແມ!
ຜ້າຄາດແອວນັ້ນໄດ້ຖືກທຳລາຍ; ຈະໃຊ້ການອັນໃດກໍບໍ່ໄດ້.
[8]ແລ້ວພຣະທັມຂອງພຣະຢາເວກໍມາຍັງຂ້ານ້ອຍວ່າ,[9]“ພຣະຢາເວຊົງກ່າວດັ່ງນີ້ວ່າ: ໃນແບບດຽວກັນ
ເຮົາກໍຈະທຳລາຍຄວາມອວດອົ່ງໃຫຍ່ຫລວງຂອງຢູດາ ແລະ ຂອງນະຄອນເຢຣູຊາເລັມ.[10]ປະຊາຊົນທີ່ຊົ່ວຮ້າຍນີ້
ຜູ້ປະຕິເສດບໍ່ຟັງຖ້ອຍຄຳຂອງເຮົາ, ຜູ້ທີ່ດຳເນີນຕາມຄວາມດື້ດ້ານແຫ່ງຈິດໃຈຂອງພວກເຂົາ, ຜູ້ໄດ້ຕິດຕາມພະອື່ນໆ
ໄປເພື່ອນະມັດສະການພວກມັນ ແລະໄດ້ໂຄ້ງຄຳນັບພະເຫລົ່ານັ້ນ—ພວກເຂົາຈະເປັນເຫມືອນຜ້າຄາດແອວນີ້ ຊຶ່ງຈະໃຊ້ການໃດກໍບໍ່ໄດ້.
[11]ເພາະເຊັ່ນດຽວກັນກັບຜ້າຄາດແອວຕິດຢູ່ທີ່ແອວຂອງມະນຸດສັນໃດ ເຮົາກໍໄດ້ເຮັດໃຫ້ເຊື້ອສາຍທັງຫມົດຂອງອິດສະຣາເອນ
ແລະເຊື້ອສາຍທັງຫມົດຂອງຢູດາຕິດຢູ່ກັບເຮົາສັນນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພື່ອພວກເຂົາທັງຫລາຍຈະເປັນປະຊາຊົນຂອງເຮົາ, ເພື່ອນຳສຽງຄຳສັນລະເສີນ, ແລະສະຫງ່າລາສີແກ່ເຮົາ. ແຕ່ພວກເຂົາກໍບໍ່ຟັງ.
[12]ສະນັ້ນ ເຈົ້າຈົ່ງກ່າວຖ້ອຍຄຳນີ້ແກ່ພວກເຂົາ, ‘ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນກ່າວດັ່ງນີ້ວ່າ:
ໄຫເຫລົ້າອະງຸ່ນທຸກຫນ່ວຍຈະເຕັມດ້ວຍເຫລົ້າອະງຸ່ນ.’ ພວກເຂົາທັງຫລາຍຈະເວົ້າກັບເຈົ້າວ່າ, ‘ພວກເຮົາບໍ່ຮູ້ບໍ່ແທ້ໆ
ຫລືວ່າໄຫທຸກຫນ່ວຍຈະຕ້ອງເຕັມດ້ວຍເຫລົ້າອະງຸ່ນ?’[13]ດັ່ງນັ້ນຈົ່ງເວົ້າກັບພວກເຂົາວ່າ, ‘ພຣະຢາເວກ່າວດັ່ງນີ້ວ່າ: ເບິ່ງແມ,
ເຮົາຈະໃຫ້ຊາວແຜ່ນດິນນີ້ທັງຫມົດເຕັມໄປດ້ວຍຄວາມມຶນເມົາ, ຄືກະສັດທັງຫລາຍຜູ້ປະທັບເທິງບັນລັງຂອງດາວິດ, ພວກປະໂລຫິດ,
ພວກຜູ້ປະກາດພຣະທັມ, ແລະຊາວນະຄອນເຢຣູຊາເລັມທັງຫມົດ.[14]ແລ້ວພຣະຢາເວຈະໂຍນພວກເຂົາໃຫ້ຕຳກັນ, ພວກພໍ່ຕຳກັບພວກລູກ—
ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະບໍ່ສົງສານ, ຫລືມີຄວາມເມດຕາ ແລະຫລືເຮົາຈະບໍ່ສະຫງວນພວກເຂົາຈາກການທຳລາຍ.’”
[15]ຈົ່ງຟັງແລະຕັ້ງໃຈຟັງ. ຢ່າອວດດີໄປເລີຍ, ເພາະພຣະຢາເວຊົງໃຫ້ພຣະຄຳເວົ້າແລ້ວ.
[16]ຈົ່ງຖວາຍສະຫງ່າລາສີແກ່ພຣະຢາເວພຣະເຈົ້າຂອງພວກເຈົ້າທັງຫລາຍ ກ່ອນທີ່ພຣະອົງຈະຊົງນຳຄວາມມືດມາ,
ກ່ອນທີ່ຕີນຂອງພວກເຈົ້າຈະສະດຸດ ເທິງພູເຂົາທີ່ມີແສງສະລົວ. ແລະຂະນະເມື່ອພວກເຈົ້າທັງຫລາຍຊອກຫາຄວາມສະຫວ່າງ
ແຕ່ພຣະອົງຊົງກັບໃຫ້ເປັນຄວາມມືດມິດ, ເປັນເມກມືດທຶບ.[17]ດັ່ງນັ້ນຖ້າພວກເຈົ້າບໍ່ຟັງ, ເຮົາຈະຮ້ອງໄຫ້ແຕ່ພຽງລຳພັງ
ເພາະຄວາມອວດອົ່ງທະນົງຕົວຂອງພວກເຈົ້າ. ດວງຕາຂອງຂ້ານ້ອຍຈະຮ້ອງໄຫ້ຢ່າງຫນັກ ແລະມີນ້ຳຕາອາບຫນ້າ,
ເພາະຝູງແກະຂອງພຣະຢາເວຖືກຕ້ອນເອົາໄປເປັນຊະເລີຍ.
[18]“ຈົ່ງກ່າວແກ່ກະສັດ ແລະພະລາຊິນີວ່າ, ‘ຂໍຊົງຖ່ອມໂຕພະອົງລົງ ແລະຂໍປະທັບລົງ, ເພາະວ່າມົງກຸດເທິງຫົວຂອງພະອົງ, ຄວາມພາກພູມ ແລະ
ແຫ່ງສະຫງ່າລາສີຂອງພະອົງຈະຕົກລົງມາແລ້ວ.’[19]ເມືອງຕ່າງໆ ເນເກບຈະຖືກປິດ ໂດຍບໍ່ມີໃຜຈະເປີດໄດ້.
ຢູດາຈະຕ້ອງຖືກກວາດໄປເປັນຊະເລີຍ, ຖືກກວາດໄປເປັນຊະເລີຍທັງຫມົດ.
[20]ຈົ່ງເງີຍຫນ້າຂອງພວກເຈົ້າຂຶ້ນ ແລະເບິ່ງເຂົາເຫລົ່ານັ້ນທີ່ມາຈາກທາງທິດເຫນືອ. ຝູງແກະທີ່ໄດ້ມອບໄວ້ໃຫ້ແກ່ພວກເຈົ້ານັ້ນຢູ່ທີ່ໃດ,
ຄືຝູງແກະທີ່ງົດງາມຂອງພວກເຈົ້ານັ້ນ?[21]ເຈົ້າຈະວ່າຢ່າງໃດເມື່ອພຣະເຈົ້າຕັ້ງຄົນເຫລົ່ານັ້ນຜູ້ຊຶ່ງຕົວເຈົ້າເອງໄດ້ສອນເຂົາໃຫ້ເປັນມິດກັບເຈົ້າ?
ສິ່ງເຫລົ່ານີ້ບໍ່ໄດ້ເປັນຈຸດເລີ່ມຕົ້ນຂອງຄວາມເຈັບປວດຂອງຜູ້ຍິງທີ່ກຳລັງ ຈະເຂົ້າມາປົກຄຸມພວກເຈົ້າ ເຫມືອນຍິງທີ່ກຳລັງເກີດລູກບໍ?
[22]ແລ້ວຖ້າພວກເຈົ້າເວົ້າໃນໃຈຂອງພວກເຈົ້າວ່າ, ‘ເປັນຫຍັງສິ່ງເຫລົ່ານີ້ຈຶ່ງເກີດກັບຂ້ານ້ອຍ?’ ກໍເພາະຄວາມຊົ່ວຊ້າທີ່ຫລວງຫລາຍຂອງເຈົ້າ
ທີ່ເສື້ອຄຸມຂອງພວກເຈົ້າຈຶ່ງຕ້ອງຖືກຮື້ຂຶ້ນ ແລະເຈົ້າຈຶ່ງຖືກລະເມີດ.[23]ປະຊາຊົນຊາວຄູສ ປ່ຽນສີຜິວຂອງຕົນໄດ້ບໍ,
ຫລືເສືອດາວປ່ຽນລາຍຂອງມັນໄດ້ບໍ? ຖ້າດັ່ງນັ້ນ, ພວກເຈົ້າຜູ້ທີ່ຄຸ້ນເຄີຍກັບການເຮັດຄວາມຊົ່ວ ຈະມາເຮັດຄວາມດີກໍໄດ້ຫລື?[24]ສະນັ້ນ
ເຮົາຈະກະຈາຍພວກເຂົາໄປເຫມືອນແກບ ທີ່ຖືກລົມພັດຈາກຖິ່ນແຫ້ງແລ້ງກັນດານ.
[25]ນີ້ເປັນສ່ວນທີ່ເຮົາໄດ້ຕວງອອກໃຫ້ແກ່ພວກເຈົ້າ, ສ່ວນທີ່ເຮົາໄດ້ມອບໃຫ້ແກ່ເຈົ້າ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເຈົ້າໄດ້ລືມເຮົາເສຍ ແລະໄວ້ວາງໃຈໃນການຂີ້ຕົວະ.[26]ສະນັ້ນ ເຮົາເອງຈະແກ້ເສື້ອຄຸມຂອງພວກເຈົ້າມາປົກຫນ້າພວກເຈົ້າ,
ແລະສ່ວນທີ່ສ່ວນຕົວຂອງເຈົ້າຈະຖືກເປີດເຜີຍ.[27]ເຮົາໄດ້ເຫັນການລ່ວງປະເວນີ ແລະ ຄວາມກຳນັດ
ແລະຄວາມຊົ່ວຮ້າຍຂອງການເປັນໂສເພນີຂອງພວກເຈົ້າ, ເທິງໂນນພູທັງຫລາຍ ແລະໃນທົ່ງນາ ແລະເຮົາໄດ້ເຫັນທີ່ຫນ້າກຽດຊັງເຫລົ່ານີ້!
ວິບັດແກ່ເຈົ້າ, ນະຄອນເຢຣູຊາເລັມເອີຍ! ອີກດົນຈັກເທົ່າໃດກ່ອນທີ່ເຈົ້າຈະຍອມເຮັດໃຫ້ພວກເຈົ້າສະອາດໄດ້ອີກ?”

14 [1]ນີ້ຄືພຣະທັມຂອງພຣະຢາເວທີ່ມາເຖິງເຢເຣມີຢາ ກ່ຽວດ້ວຍຄວາມແຫ້ງແລ້ງວ່າ,[2]“ໃຫ້ຢູດາໄວ້ທຸກ;
ໃຫ້ປະຕູເມືອງທັງຫລາຍຂອງນາງພັງທະລາຍລົງ. ພວກເຂົາກຳລັງຄວນຄາງສຳລັບແຜ່ນດິນ;
ແລະສຽງຮ້ອງຂອງນະຄອນເຢຣູຊາເລັມກໍກຳລັງດັງຂຶ້ນໄປ.[3]ຂ້າລາຊະການຂອງນາງສົ່ງລູກນ້ອຍຂອງຕົນໃຫ້ໄປຕັກນ້ຳ.
ເມື່ອພວກເຂົາໄປຍັງບ່ອນເກັບນ້ຳ, ພວກເຂົາບໍ່ສາມາດຫານ້ຳໄດ້. ພວກເຂົາກໍກັບໄປດ້ວຍພາຊະນະເປົ່າ;
ພວກເຂົາຈຶ່ງຄຸມຫົວຂອງຕົນເສຍດ້ວຍຄວາມອັບອາຍ ແລະຂາຍໜ້າ.

[4]ເພາະເລື່ອງນີ້ແຜ່ນດິນກໍແຕກແຫງ ເນື່ອງຈາກບໍ່ມີຝົນຕົກເທິງແຜ່ນດິນ. ຊາວນາທັງຫລາຍກໍອັບອາຍ ແລະຄຸມຫົວຂອງຕົນເສຍ.
[5]ເພາະແມ່ນແຕ່ກວາງໂຕແມ່ກໍຈາກລູກທີ່ເກີດໃຫມ່ໃນທ້ອງທົ່ງ ແລະປະຖິ້ມພວກມັນເສຍ, ເພາະວ່າບໍ່ມີຫຍ້າ.[6]ພວກລໍປ່າຢືນຢູ່ເທິງບ່ອນສູງ ໂລ່ງ
ແລະພວກມັນຫັນໃຈໃນສາຍລົມເຫມືອນກັບພວກຫມາປ່າ. ຕາຂອງມັນກໍມືດມົວ, ເພາະວ່າບໍ່ມີພືດຜັກ.”
[7]“ແມ່ນວ່າຄວາມຜິດບາບຂອງພວກຂ້ານ້ອຍທັງຫລາຍກໍເປັນພະຍານຟ້ອງພວກຂ້ານ້ອຍ, ຂ້າແດ່ພຣະຢາເວ, ຂໍພຣະອົງຊົງໂຜດເຖີດ;
ເພື່ອເຫັນແກ່ພຣະນາມຂອງພຣະອົງ. ດ້ວຍວ່າບັນດາການຊົ່ວຮ້າຍຂອງພວກຂ້ານ້ອຍທັງຫລາຍກໍເພີ່ມຫລາຍຂຶ້ນ;
ພວກຂ້ານ້ອຍທັງຫລາຍເຮັດບາບຕໍ່ພຣະອົງ.[8]ຂ້າແດ່ພຣະອົງຜູ້ຊົງເປັນຄວາມຫວັງແຫ່ງອິດສະຣາເອນ,
ເປັນພຣະຜູ້ຊ່ວຍຂອງພວກເຂົາໃນຍາມລຳບາກ, ເຫດໃດພຣະອົງຈະຊົງເປັນເຫມືອນແຂກເມືອງໃນແຜ່ນດິນ, ຫລືເຫມືອນຄົນເດີນທາງ
ແວ່ອາໄສຄ້າງພຽງຄືນດຽວ?[9]ເຫດໃດພຣະອົງຈຶ່ງຊົງເປັນເຫມືອນຊາຍທີ່ງຶ່ງງັນ ຫລືເຫມືອນນັກຮົບຜູ້ທີ່ບໍ່ສາມາດຊ່ວຍໃຜໄດ້?
ຂ້າແດ່ພຣະຢາເວ! ເຖິງປານນັ້ນກໍດີ, ພຣະອົງຊົງສະຖິດທ່າມກາງພວກຂ້ານ້ອຍທັງຫລາຍ.
ພຣະນາມຂອງພຣະອົງໄດ້ຮັບການປະກາດເຫນືອພວກຂ້ານ້ອຍ. ຂໍຢ່າຊົງປະຂ້ານ້ອຍທັງຫລາຍໄວ້.”
[10]ພຣະຢາເວກ່າວແກ່ຊົນຊາດນີ້ວ່າ: “ດ້ວຍວ່າ ພວກເຂົາທັງຫລາຍຮັກທີ່ຈະພະເນຈອນໄປເຊັ່ນນີ້,
ພວກເຂົາບໍ່ຫ້າມຕີນຂອງພວກເຂົາໄວ້ຈາກການເຮັດເຊັ່ນນັ້ນ. “ພຣະຢາເວຈຶ່ງບໍ່ຊົງຊື່ນຊົມພວກເຂົາ. ບັດນີ້
ພຣະອົງຈະຊົງລະນຶກເຖິງຄວາມຊົ່ວຊ້າຂອງພວກເຂົາ ແລະລົງໂທດການຜິດບາບຂອງພວກເຂົາ.[11]ພຣະຢາເວຊົງບອກຂ້ານ້ອຍວ່າ,
“ຢ່າອະທິຖານເພື່ອຄວາມຢູ່ເຢັນເປັນສຸກຂອງປະຊາຊົນເຫລົ່ານີ້ເລີຍ.[12]ຖ້າພວກເຂົາຫາກຖືສິນອົດອາຫານ,
ເຮົາກໍຈະບໍ່ຟັງສຽງຮ້ອງໄຫ້ຂໍຄວາມຊ່ວຍເຫລືອຂອງພວກເຂົາ, ຖ້າຫາກເຜົາສັດແລະຖວາຍອາຫານແກ່ເຮົາ,
ເຮົາກໍຈະບໍ່ຍິນດີຮັບເອົາໃນສິ່ງເຫລົ່ານັ້ນ. ເພາະເຮົາຜານພວກເຂົາເສຍດ້ວຍດາບ, ດ້ວຍການອຶດຢາກ, ແລະດ້ວຍພະຍາດລະບາດ.”
[13]ແລ້ວຂ້ານ້ອຍໄດ້ກ່າວວ່າ, “ໂອ, ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ! ເບິ່ງດູ, ພວກຜູ້ປະກາດພຣະຄຳກຳລັງກ່າວກັບປະຊາຊົນວ່າ,
‘ພວກເຈົ້າຈະບໍ່ເຫັນດາບ ຫລື ການອຶດຢາກດອກ, ເພາະເຮົາຈະໃຫ້ຄວາມຫມັ້ນຄົງແກ່ພວກເຈົ້າໃນສະຖານທີ່ນີ້.’”[14]ພຣະຢາເວໄດ້ຊົງຕອບວ່າ,
“ພວກຜູ້ປະກາດພຣະທັມຈະໃຊ້ນາມຂອງເຮົາເວົ້າຄຳຕົວະ. ເຮົາບໍ່ໄດ້ໃຊ້ໃຫ້ພວກເຂົາໄປ, ເຮົາບໍ່ໄດ້ບັນຊາໃຫ້ພວກເຂົາ ຫລືເວົ້າກັບພວກເຂົາ.
ແຕ່ການເຜີຍນິມິດບໍ່ຈິງ ແລະບໍ່ມີປະໂຫຍດ, ການທຳນາຍທີ່ຫລອກຫລວງມາຈາກຈິດໃຈຂອງພວກເຂົາເອງ
ທີ່ພວກເຂົາກຳລັງທຳນາຍໃຫ້ແກ່ພວກເຈົ້າ.”
[15]ສະນັ້ນ ພຣະຢາເວຈຶ່ງກ່າວດັ່ງນີ້, “ກ່ຽວກັບພວກທີ່ປະກາດພຣະທັມ ທີ່ປະກາດພຣະທັມໃນນາມຂອງເຮົາ ແມ່ນວ່າບໍ່ໄດ້ໃຊ້ພວກເຂົາ—
ຄົນເຫລົ່ານີ້ທີ່ກ່າວວ່າຈະບໍ່ມີດາບຫລືການອຶດຢາກອາຫານໃນແຜ່ນດິນນີ້: ພວກຜູ້ປະກາດພຣະທັມເຫລົ່ານີ້ຈະຕາຍເສຍ ດ້ວຍດາບ ແລະ
ການອຶດຢາກອາຫານ.[16]ແລ້ວປະຊາຊົນຜູ້ທີ່ໄດ້ຍິນພວກຜູ້ປະກາດພຣະທັມນັ້ນ
ຈະຖືກໂຍນຖິ້ມໄວ້ຕາມຖະຫນົນທັງຫລາຍຂອງນະຄອນເຢຣູຊາເລັມ ເພາະການອຶດຢາກອາຫານ ແລະດາບ,
ເພາະຈະບໍ່ມີຜູ້ໃດຝັງສົບຂອງພວກເຂົາ—ຄືທັງພວກເຂົາເອງ, ເມຍຂອງພວກເຂົາ ແລະລູກຊາຍ, ຫລືລູກຍິງຂອງພວກເຂົາ—
ເພາະເຮົາຈະເທຄວາມຊົ່ວຮ້າຍຂອງພວກເຂົາອອກມາເທິງພວກເຂົາ.
[17]ຈົ່ງກ່າວຖ້ອຍຄຳນີ້ແກ່ພວກເຂົາວ່າ: ‘ຂໍໃຫ້ດວງຕາຂອງເຮົາມີນ້ຳຕາໄຫລທັງກາງເວັນ ແລະກາງຄືນ. ຢ່າໃຫ້ຢຸດເຊົາ,
ເພາະຈະມີການລົ້ມສະລາຍທີ່ຍິ່ງໃຫຍ່ຂອງລູກສາວປອດແຫ່ງປະຊາຊົນຂອງເຮົາ—ດ້ວຍບາດແຜບາດເລິກ ແລະບໍ່ສາມາດຮັກສາໄດ້.
[18]ຖ້າເຮົາອອກໄປຕາມທົ່ງນາ, ກໍພົບເຫັນຊາກສົບຄົນຕາຍຍ້ອນຖືກຂ້າດ້ວຍດາບ! ຖ້າເຮົາເຂົ້າໄປໃນເມືອງ,
ກໍພົບເຫັນຄົນເຈັບປ່ວຍຍ້ອນການອຶດຢາກອາຫານ. ທັງພວກຜູ້ປະກາດພຣະທັມ ແລະ ປະໂລຫິດ ຕາງກໍອອກເດີນທາງໄປຍັງດິນແດນອື່ນ,
ແລະພວກເຂົາບໍ່ຮູ້ຈັກ.’”
[19]ພຣະອົງຊົງປະຕິເສດຢູດາຢ່າງສິ້ນເຊີງແລ້ວບໍ? ພຣະອົງຊົງກຽດຊັງຊີໂອນ ແລ້ວຫລື? ເປັນຫຍັງຈຶ່ງຊົງທຳຮ້າຍພວກຂ້ານ້ອຍຢ່າງຫນັກ
ຈົນບໍ່ສາມາດຮັກສາສຳລັບພວກຂ້ານ້ອຍໃຫ້ດີໄດ້? ພວກຂ້ານ້ອຍທັງຫລາຍໄດ້ຫວັງຄວາມສະຫງົບສຸກ ແຕ່ບໍ່ພົບສິ່ງດີໃດໆເລີຍ—
ແລະຫວັງເຖິງເວລາໃນການຮັກສາ, ແຕ່ເບິ່ງແມ, ມີແຕ່ຄວາມຫນ້າຢ້ານຫນ້າກົວເທົ່ານັ້ນ.[20]ຂ້າແດ່ພຣະຢາເວ,
ພວກຂ້ານ້ອຍຍອມຮັບຜິດໃນຄວາມອະທຳ, ແລະຄວາມຜິດບາບຂອງບັນພະບູລຸດຂອງພວກຂ້ານ້ອຍ,
ເພາະພວກຂ້ານ້ອຍໄດ້ເຮັດບາບຕໍ່ສູ້ພຣະອົງແທ້.
[21]ຂໍຢ່າຊົງປະຕິເສດພວກຂ້ານ້ອຍ! ເພາະເຫັນແກ່ພຣະນາມຂອງພຣະອົງ, ຂໍຢ່າຊົງໃຫ້ບັນລັງທີ່ນັ່ງຮຸ່ງເຮືອງຂອງພຣະອົງຕ້ອງເສື່ອມເສຍ.
ຂໍຊົງລະນຶກເຖິງ ແລະຂໍຢ່າຊົງຫັກພັນທະສັນຍາຂອງພຣະອົງ ຊຶ່ງມີໄວ້ກັບພວກຂ້ານ້ອຍ.
[22]ໃນບັນດາຮູບເຄົາລົບທັງຫລາຍຂອງຊົນຊາດທັງຫລາຍ ມີພະອົງໃດທີ່ເຮັດໃຫ້ທ້ອງຟ້າເກີດຝົນໄດ້? ບໍ່ແມ່ນພຣະອົງດອກຫລື,
ຂ້າແດ່ພຣະຢາເວ ພຣະອົງເປັນພຣະເຈົ້າທີ່ຊົງເຮັດຢ່າງນັ້ນໄດ້ບໍ່ແມ່ນຫລື? ພວກຂ້ານ້ອຍຫວັງໃຈໃນພຣະອົງ
ເພາະພຣະອົງຊົງກະເຮັດສິ່ງເຫລົ່ານີ້ທັງສິ້ນ.

15 [1]ຕໍ່ມາ ພຣະຢາເວຊົງກ່າວຕໍ່ຂ້ານ້ອຍວ່າ, "ເຖິງແມ່ນວ່າໂມເຊ ຫລືຊາມູເອນກຳລັງຢືນອ້ອນວອນຢູ່ຕໍ່ຫນ້າເຮົາ,
ເຮົາກໍຈະບໍ່ມີໃຈເມດຕາປະຊາຊາດເຫລົ່ານີ້ເລີຍ. ຈົ່ງໃຫ້ພວກເຂົາຫນີໄປໃຫ້ພົ້ນສາຍຕາຂອງເຮົາ, ໃຫ້ພວກເຂົາໄປ.[2]ສິ່ງນີ້ຈະເກີດຂຶ້ນວ່າ
ພວກເຂົາຈະເວົ້າກັບເຈົ້າວ່າ, 'ພວກເຮົາຈະໄປໃສ? ແລ້ວເຈົ້າຈົ່ງບອກພວກເຂົາດັ່ງນີ້ວ່າ: 'ພຣະຢາເວກ່າວດັ່ງນີ້ວ່າ:
ຄົນເຫລົ່ານັ້ນທີ່ຖືກກຳນົດໃຫ້ຕາຍກໍຈະຕ້ອງຕາຍ; ຄົນເຫລົ່ານັ້ນທີ່ຖືກກຳນົດໃຫ້ຕາຍດ້ວຍດາບ ກໍຈະພົບພໍ້ດາບ.
ຄົນເຫລົ່ານັ້ນທີ່ຖືກກຳນົດໃຫ້ອຶດຢາກອາຫານ ກໍຈະພົບການອຶດຢາກອາຫານ; ແລະຄົນທີ່ຖືກກຳນົດໃຫ້ຖືກຈັບໄປເປັນຊະເລີຍ
ກໍຈະເປັນຊະເລີຍ.'

[3]ເພາະເຮົາຈະກຳນົດພວກເຂົາເປັນສີ່ກຸ່ມ—ນີ້ເປັນຄຳປະກາດຂອງພຣະຢາເວ—ຄືດາບເພື່ອສັງຫານບາງຄົນ, ຖືກຫມາດຶງແກ່ໄປ,
ຖືກຝູງນົກໃນອາກາດສັບຕອດກິນ ແລະສັດປ່າເທິງແຜ່ນດິນໂລກກັດກິນ ແລະທຳລາຍໄປແດ່.[4]ເຮົາຈະເຮັດໃຫ້ພວກເຂົາເປັນສິ່ງທີ່ຫນ້າຢ້ານກົວ
ແກ່ຣາຊະອານາຈັກທັງປວງແຫ່ງແຜ່ນດິນໂລກ, ເພາະສິ່ງທີ່ ມານາເຊລູກຊາຍຂອງ ເຮເຊກີຢາ, ກະສັດແຫ່ງຢູດາ,
ໄດ້ຊົງເຮັດໃນນະຄອນເຢຣູຊາເລັມ."
[5]ເພາະວ່າໃຜຈະສົງສານພວກເຈົ້າ, ເຢຣູຊາເລັມເອີຍ? ຫລືໃຜຈະເສຍໃຈກັບພວກເຈົ້າ? ໃຜຈະແວ່ມາຖາມທຸກສຸກຂອງພວກເຈົ້າ?
[6]ເຈົ້າໄດ້ປະຕິເສດເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຈົ້າໄດ້ຖອຍຫລັງໄປຈາກເຮົາ. ດັ່ງນັ້ນເຮົາຈະຕໍ່ສູ້ພວກເຈົ້າດ້ວຍມືຂອງເຮົາ
ແລະທຳລາຍພວກເຈົ້າ. ເຮົາເບື່ອຫນ່າຍທີ່ຈະມີເມດຕາຕໍ່ເຈົ້າແລ້ວ.[7]ດັ່ງນັ້ນເຮົາຈະຝັດເຂົ້າດ້ວຍຫວີຝັດເຂົ້າ ທີ່ປະຕູທັງຫລາຍຂອງແຜ່ນດິນ.
ເຮົາຈະເຮັດໃຫ້ພວກເຂົາພາກຈາກກັນ. ເຮົາຈະທຳລາຍປະຊາຊົນຂອງເຮົາ
ເພາະພວກເຂົາທັງຫລາຍບໍ່ໄດ້ຖອຍຫລັງກັບຈາກພຶດຕິການຂອງຕົນ.
[8]ເຮົາຈະເຮັດໃຫ້ຈຳນວນຂອງແມ່ຫມ້າຍຂອງພວກເຂົາມີຫລາຍ ຍິ່ງກວ່າເມັດຊາຍໃນທະເລ.
ໃນຕອນທ່ຽງເຮົາຈະສົ່ງຜູ້ທຳລາຍມາສູ່ບັນດາແມ່ຂອງຄົນຫນຸ່ມທັງຫລາຍ. ເຮົາຈະເຮັດໃຫ້ຄວາມຢ້ານຕົກໃຈ
ແລະຄວາມຫນ້າຢ້ານກົວຕົກລົງເຫນືອພວກເຂົາໂດຍທັນທີ.[9]ແມ່ທີ່ເກີດລູກເຈັດຄົນກໍອ່ອນກຳລັງ. ນາງຈະສະລົບໄປ.
ດວງອາທິດຂອງນາງຈະຕົກເມື່ອຍັງເວັນຢູ່. ນາງຈະຕ້ອງອັບອາຍ ແລະຂາຍຫນ້າ,
ເພາະເຮົາຈະມອບຜູ້ທີ່ເຫລືອຢູ່ໃຫ້ແກ່ດາບຕໍ່ຫນ້າສັດຕູຂອງເຂົາ —ນີ້ເປັນຄຳປະກາດຂອງພຣະຢາເວ."
[10]ວິບັດແກ່ຂ້ານ້ອຍ, ແມ່ຂອງຂ້ານ້ອຍ! ເພາະແມ່ໄດ້ໃຫ້ກຳເນີດຂ້ານ້ອຍມາ, ຂ້ານ້ອຍເປັນຄົນທີ່ເຮັດໃຫ້ເກີດການໂຕ້ຖຽງ
ແລະຂັດແຍ້ງກັນທົ່ວທັງແຜ່ນດິນ. ຂ້ານ້ອຍກໍບໍ່ໄດ້ໃຫ້ເຂົາກູ້ຢືມ, ຫລືມີໃຜໃຫ້ຂ້ານ້ອຍຢືມ, ແຕ່ພວກເຂົາທຸກຄົນສາບແຊ່ງຂ້ານ້ອຍ.
[11]ພຣະຢາເວກ່າວວ່າ: "ເຮົາບໍ່ໄດ້ຊ່ວຍເຈົ້າໃຫ້ໄດ້ຮັບສິ່ງດີຫລື? ເຮົາບໍ່ໄດ້ໃຫ້ພວກສັດຕູເຮັດດີຕໍ່ພວກເຈົ້າໃນເວລາລຳບາກ
ແລະໃນເວລາທຸກໃຈຢ່າງແນ່ນອນ.[12]ມີໃຜສາມາດຫັກເຫລັກໄດ້ຫລື? ໂດຍສະເພາະແມ່ນເຫລັກຈາກທາງທິດເຫນືອທີ່ປະສົມທອງແດງໄດ້ຫລື?
[13]ເຮົາຈະມອບຄວາມຮັ່ງມີ ແລະບັນດາຊັບສົມບັດຂອງພວກເຈົ້າ ເປັນເຄື່ອງປຸ້ນໃຫ້ແກ່ພວກສັດຕູຂອງພວກເຈົ້າ.
ເຮົາຈະເຮັດເຊັ່ນນີ້ເພາະບາບທຸກຢ່າງຂອງພວກເຈົ້າ ຕະຫລອດທົ່ວດິນແດນຂອງພວກເຈົ້າ.[14]ແລ້ວເຮົາຈະເຮັດໃຫ້ພວກເຈົ້າ
ຕ້ອງຮັບໃຊ້ສັດຕູຂອງພວກເຈົ້າ ໃນແຜ່ນດິນຊຶ່ງພວກເຈົ້າບໍ່ຮູ້ຈັກ, ເພາະໄຟຈະຖືກຈູດຂຶ້ນໃນຄວາມຮ້າຍຂອງເຮົາຕໍ່ພວກເຈົ້າ."
[15]ຂ້າແດ່ພຣະຢາເວ, ພຣະອົງຊົງຮູ້! ຂໍຊົງລະນຶກເຖິງຂ້ານ້ອຍ ແລະຊົງຊ່ວຍຂ້ານ້ອຍ. ຂໍຊົງນຳການແກ້ແຄ້ນແກ່ຄົນເຫລົ່ານັ້ນ
ທີ່ຂົ່ມເຫັງພວກຂ້ານ້ອຍ. ພຣະອົງຊົງອົດກັ້ນພຣະໄທຂອງພຣະອົງນັ້ນ, ແຕ່ຂໍຢ່າອະນຸຍາດໃຫ້ພວກເຂົານຳຂ້ານ້ອຍໄປເສຍ;
ຂໍຊົງລະນຶກວ່າຂ້ານ້ອຍທົນການຕິຕຽນດ້ວຍເຫັນແກ່ພຣະອົງ.[16]ເມື່ອໄດ້ພົບພຣະທັມຂອງພຣະອົງແລ້ວ, ຂ້ານ້ອຍກໍກິນເສຍ.
ພຣະທັມຂອງພຣະອົງເປັນຄວາມຊື່ນບານແກ່ຂ້ານ້ອຍ ແລະເປັນຄວາມປິຕິຍິນດີແຫ່ງຈິດໃຈຂອງຂ້ານ້ອຍ, ຂ້າແດ່ພຣະຢາເວ,
ພຣະເຈົ້າຈອມໂຍທາ.
[17]ຂ້ານ້ອຍບໍ່ໄດ້ນັ່ງຢູ່ໃນຫມູ່ບັນດາຄົນເຫລົ່ານັ້ນທີ່ສະຫລອງ ຫລືປິຕິຍິນດີ. ຂ້ານ້ອຍນັ່ງຢູ່ຄົນດຽວ ເພາະເຫດພຣະຫັດອັນຊົງຣິດຂອງພຣະອົງ,
ເພາະພຣະອົງຊົງໃຫ້ຂ້ານ້ອຍເຕັມໄປດ້ວຍຄວາມຂັດເຄືອງໃຈ.[18]ເຫດໃດຄວາມເຈັບຂອງຂ້າພະອົງຈຶ່ງບໍ່ໄດ້ຍັບຍັ້ງ ແລະບາດແຜຂອງຂ້ານ້ອຍ,
ມັນໄດ້ປະຕິເສດມທີ່ຈະຮັບການຮັກສາຫລື? ພຣະອົງຈະຊົງເປັນເຫມືອນຫ້ວຍທີ່ເພິ່ງບໍ່ໄດ້ແກ່ຂ້ານ້ອຍບໍ ຫລືຊົງເປັນເຫມືອນນ້ຳທີ່ເຫືອດແຫ້ງບໍ?
[19]ເພາະສະນັ້ນ ພຣະຢາເວຈຶ່ງກ່າວວ່າ, "ເຢເຣມີຢາເອີຍ, ຖ້າພວກເຈົ້າກັບໃຈມາ, ແລ້ວເຮົາຈະໃຫ້ເຈົ້າກັບມາສູ່ສະພາບດີ,
ແລະເຈົ້າຈະຢືນຢູ່ຕໍ່ຫນ້າເຮົາ ແລະຮັບໃຊ້ເຮົາ. ເພາະຖ້າເຈົ້າແຍກສິ່ງໂງ່ຈ້າຕ່າງໆອອກໄປຈາກສິ່ງປະເສີດ, ເຈົ້າຈະເປັນເຫມືອນປາກຂອງເຮົາ.
ປະຊາຊົນທັງຫລາຍຈະຫັນກັບມາຫາເຈົ້າ, ແຕ່ຕົວເຈົ້າເອງ ຕ້ອງບໍ່ຫັນກັບໄປຫາພວກເຂົາ.
[20]ເຮົາຈະເຮັດໃຫ້ພວກເຈົ້າເປັນກຳແພງປ້ອມທອງແດງຊຶ່ງຜ່ານເຂົ້າໄປບໍ່ໄດ້ ແລະພວກເຂົາທັງຫລາຍຈະຕໍ່ສູ້ກັບເຈົ້າ.
ແຕ່ພວກເຂົາຈະບໍ່ຊະນະເຈົ້າ, ເພາະເຮົາຢູ່ກັບພວກເຈົ້າ ເພື່ອຊ່ວຍເຈົ້າໃຫ້ລອດ ແລະຊ່ວຍກູ້ເຈົ້າ—ນີ້ເປັນຄຳປະກາດຂອງພຣະຢາເວ—
[21]"ເພາະເຮົາຈະຊ່ວຍກູ້ເຈົ້າໃຫ້ພົ້ນຈາກມືຂອງຄົນຊົ່ວ ແລະໄຖ່ພວກເຈົ້າຈາກເງື້ອມມືຂອງຄົນອຳມະຫິດ."

 generated on Tue Jun 17 19:01:42 2025

## 16

[1]ພຣະທັມຂອງພຣະຢາເວໄດ້ມາເຖິງຂ້ານ້ອຍ, ກ່າວດັ່ງນີ້ວ່າ,[2]“ເຈົ້າຢ່າມີເມຍ ແລະເຈົ້າຢ່າມີລູກຊາຍ ຫລືລູກສາວໃນສະຖານທີ່ນີ້.
[3]ເພາະພຣະຢາເວກ່າວດັ່ງນີ້ແກ່ລູກຊາຍ ແລະລູກສາວທີ່ເກີດໃນສະຖານທີ່ນີ້, ແກ່ພວກແມ່ທີ່ເກີດລູກເຫລົ່ານັ້ນ,
ແລະແກ່ພວກພໍ່ທີ່ໄດ້ໃຫ້ບັງເກີດຄົນເຫລົ່ານັ້ນໃນແຜ່ນດິນນີ້ວ່າ,[4]‘ເຂົາທັງຫລາຍຈະຕາຍດ້ວຍພະຍາດຮ້າຍ.
ພວກເຂົາຈະບໍ່ມີການຄໍ່າຄວນອາໄລພວກເຂົາ ຫລືຈະບໍ່ມີໃຜຈັດການຝັງເຂົາ. ພວກເຂົາຈະເປັນເຫມືອນຂີ້ສັດທີ່ຢູ່ເທິງພື້ນແຜ່ນດິນ.
ເພາະພວກເຂົາຈະພິນາດດ້ວຍດາບ ແລະການອຶດຢາກອາຫານ,
ແລະສົບທັງຫລາຍຂອງພວກເຂົາຈະເປັນອາຫານຂອງນົກໃນອາກາດທັງຫລາຍ ແລະບັນດາສັດປ່າເທິງແຜ່ນດິນໂລກ.’

[5]ເພາະຖ້ອຍຄໍາຂອງພຣະຢາເວໄດ້ມາເຖິງຂ້ານ້ອຍ, ກ່າວດັ່ງນີ້ວ່າ, ‘ຢ່າເຂົ້າໄປໃນເຮືອນທີ່ກໍາລັງມີການໄຫວ້ທຸກ. ຢ່າໄປຄໍ່າຄວນ
ຫລືໄປສະແດງຄວາມເຫັນອົກເຫັນໃຈສໍາລັບພວກເຂົາ, ເພາະເຮົາໄດ້ເອົາສັນຕິສຸກຂອງເຮົາ ໄປຈາກຊົນຊາດນີ້ແລ້ວ, ທັງຄວາມຮັກຫມັ້ນຄົງ
ແລະຄວາມເມດຕາຂອງເຮົາ—ນີ້ເປັນຄໍາປະກາດຂອງພຣະຢາເວ.[6]ທັງຜູ້ໃຫຍ່ ແລະຜູ້ນ້ອຍຈະຕາຍໃນແຜ່ນດິນນີ້.
ຈະບໍ່ມີໃຜຈັດການຝັງສົບໃຫ້, ແລະຈະບໍ່ມີໃຜມາຄໍ່າຄວນອາໄລພວກເຂົາ ຫລືມາປາດຕົວ ຫລືມາແຖຫົວທັງຫລາຍເພື່ອພວກເຂົາ.
[7]ຈະຕ້ອງບໍ່ມີຜູ້ໃດແບ່ງປັນອາຫານໃຫ້ແກ່ຄົນໄຫວ້ທຸກ ເພື່ອຈະເລົ້າໂລມພວກເຂົາເຫດຄົນທີ່ຕາຍທັງຫລາຍນັ້ນ,
ແລະຈະຕ້ອງບໍ່ມີໃຜມອບຈອກແຫ່ງຄວາມເລົ້າໂລມໃຈໃຫ້ພໍ່ ຫລືແມ່ຂອງພວກເຂົາໄດ້ດື່ມ ເພື່ອທີ່ຈະປອບໃຈພວກເຂົາ.
[8]ເຈົ້າຕ້ອງບໍ່ເຂົ້າໃນເຮືອນທີ່ມີການລ້ຽງເພື່ອນັ່ງກິນ ແລະດື່ມກັບພວກເຂົາ.’[9]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ,
ກ່າວດັ່ງນີ້ວ່າ, ‘ເບິ່ງແມ, ຕໍ່ຫນ້າຕໍ່ຕາຂອງພວກເຈົ້າ, ໃນວັນທັງຫລາຍຂອງເຈົ້າ ແລະໃນສະຖານທີ່ແຫ່ງນີ້, ເຮົາກໍາລັງຈະເຮັດໃຫ້ສຽງບັນເທີງ
ແລະສຽງມ່ວນຊື່ນລື່ນເລີງ, ສຽງເຈົ້າບ່າວ ແລະສຽງເຈົ້າສາວ ຂາດໄປຈາກສະຖານທີ່ນີ້.’
[10]ແລ້ວສິ່ງນີ້ຈະໄດ້ເກີດຂຶ້ນ ເມື່ອເຈົ້າບອກບັນດາຖ້ອຍຄໍາເຫລົ່ານີ້ແກ່ຊົນຊາດນີ້, ແລະພວກເຂົາທັງຫລາຍຈະເວົ້າກັບພວກເຈົ້າວ່າ,
‘ເປັນຫຍັງພຣະຢາເວຈຶ່ງຊົງປະກາດໂທດໃຫຍ່ຫລວງທັງຫມົດນີ້ໃຫ້ຕົກແກ່ເຮົາ? ຄວາມຊົ່ວຊ້າ
ແລະຄວາມຜິດບາບຫຍັງແດ່ທີ່ເຮົາໄດ້ເຮັດບາບຕໍ່ພຣະຢາເວພຣະເຈົ້າຂອງເຮົາ?’[11]ດັ່ງນັ້ນຈຶ່ງກ່າວແກ່ພວກເຂົາທັງຫລາຍວ່າ,
‘ເພາະບັນພະບູລຸດຂອງພວກເຈົ້າໄດ້ປະຖິ້ມເຮົາ—ນີ້ເປັນຄໍາປະກາດຂອງພຣະຢາເວ—ແລະພວກເຂົາໄດ້ໄປຕິດຕາມພະອື່ນໆ ແລະໄດ້ບົວລະບັດ
ແລະນະມັດສະການພະເຫລົ່ານັ້ນ. ພວກເຂົາໄດ້ປະຖິ້ມເຮົາ ແລະບໍ່ໄດ້ຮັກສາພຣະບັນຍັດຂອງເຮົາ.
[12]ແຕ່ພວກເຈົ້າທັງຫລາຍໄດ້ເຮັດຊົ່ວຮ້າຍຍິ່ງກວ່າບັນພະບູລຸດຂອງພວກເຈົ້າ, ເພາະເບິ່ງແມ,
ພວກເຈົ້າແຕ່ລະຄົນກໍາລັງດໍາເນີນຕາມຈິດໃຈຊົ່ວຮ້າຍດື້ດ້ານຂອງຕົນເອງ; ທຸກຄົນປະຕິເສດບໍ່ຍອມຟັງເຮົາ.[13]ເພາະສະນັ້ນ
ເຮົາຈະໂຍນພວກເຈົ້າອອກເສຍຈາກແຜ່ນດິນນີ້ ເຂົ້າໄປໃນແຜ່ນດິນຊຶ່ງພວກເຈົ້າ, ຫລືບັນພະບູລຸດຂອງພວກເຈົ້າບໍ່ຮູ້ຈັກ,
ແລະບ່ອນນັ້ນພວກເຈົ້າຈະບົວລະບັດພະອື່ນໆ ທັງກາງເວັນ ແລະກາງຄືນ, ເພາະເຮົາຈະບໍ່ສະແດງພຣະກະລຸນາແກ່ພວກເຈົ້າເລີຍ.’
[14]ເພາະສະນັ້ນ, ເບິ່ງແມ, ວັນເຫລົ່ານັ້ນຈະມາເຖິງ—ນີ້ຄືຄໍາປະກາດຂອງພຣະຢາເວ—ເມື່ອບໍ່ມີໃຜກ່າວຕໍ່ໄປອີກວ່າ,
‘ພຣະຢາເວຜູ້ຊົງພຣະຊົນຢູ່ແນ່ສັນໃດ, ພຣະອົງຜູ້ທີ່ໄດ້ຊົງນໍາປະຊາຊົນອິດສະຣາເອນອອກມາຈາກແຜ່ນດິນເອຢິບ.’[15]ແຕ່ຈະເວົ້າວ່າ,
‘ພຣະຢາເວຊົງພຣະຊົນຢູ່ສັນໃດ, ພຣະອົງຜູ້ທີ່ໄດ້ຊົງນໍາປະຊາຊົນອິດສະຣາເອນອອກມາຈາກແດນທາງທິດເຫນືອ ແລະມາຈາກບັນດາປະເທດ
ຊຶ່ງພຣະອົງໄດ້ຊົງຂັບໄລ່ພວກເຂົາໃຫ້ໄປຢູ່ນັ້ນ.’ ເພາະເຮົາຈະນໍາພວກເຂົາກັບມາສູ່ແຜ່ນດິນຂອງພວກເຂົາເອງ
ຊຶ່ງເຮົາໄດ້ຍົກໃຫ້ບັນພະບູລຸດຂອງພວກເຂົາແລ້ວນັ້ນ.
[16]ເບິ່ງແມ! ເຮົາຈະສົ່ງຊາວປະມົງມາເປັນຈໍານວນຫລາຍ-- ນີ້ເປັນຄໍາປະກາດຂອງພຣະຢາເວ--ດັ່ງນັ້ນພວກເຂົາຈະຈັບປະຊາຊົນອອກມາ.
ພາຍຫລັງຈາກນີ້ ເຮົາຈະສົ່ງນາຍພານຈໍານວນຫລວງຫລາຍມາ ດັ່ງນັ້ນນາຍພານຈະລ່າພວກເຂົາທັງຫລາຍຕາມພູເຂົາທຸກແຫ່ງ,
ແລະຕາມໂນນພູທຸກຫນ່ວຍ ແລະຕາມລືບໂງ່ນຫີນ.[17]ເພາະວ່າ ຕາເຮົາເບິ່ງພຶດຕິກໍາທັງຫມົດຂອງພວກເຂົາ;
ພວກເຂົາບໍ່ສາມາດຈະປິດບັງໄວ້ຈາກຫນ້າເຮົາໄດ້. ຄວາມຊົ່ວຊ້າຂອງພວກເຂົາບໍ່ສາມາດຈະເຊື່ອງຈາກດວງຕາຂອງເຮົາໄດ້.
[18]ຂັ້ນທໍາອິດເຮົາຈະຈ່າຍຄືນເປັນສອງເທົ່າ ສໍາລັບຄວາມຊົ່ວຊ້າ ແລະຄວາມຜິດບາບ
ທີ່ພວກເຂົາໄດ້ເຮັດໃຫ້ແຜ່ນດິນເຮົາເປັນມົນທິນໄປດ້ວຍຊາກຂອງຮູບເຄົາລົບທີ່ຫນ້າຂີ້ດຽດ,
ແລະເຮັດໃຫ້ມໍຣະດົກຂອງເຮົາເຕັມໄປດ້ວຍບັນດາຮູບເຄົາລົບ ທີ່ຫນ້າກຽດຊັງຂອງພວກເຂົາ.”
[19]ຂ້າແດ່ພຣະຢາເວ, ພຣະອົງຊົງເປັນພຣະກໍາລັງ ແລະເປັນທີ່ລີ້ໄພຂອງຂ້ານ້ອຍ. ເປັນທີ່ກໍາບັງອັນເຂັ້ມແຂງຂອງຂ້ານ້ອຍໃນມື້ຍາກລໍາບາກ.
ບັນດາປະຊາຊາດຈະມາເຝົ້າພຣະອົງຈາກທີ່ສຸດປາຍໂລກ ແລະເວົ້າວ່າ, ‘ແນ່ແທ້ບັນພະບູລຸດຂອງພວກເຮົາໄດ້ຮັບມໍຣະດົກທີ່ຫລອກລວງ.
ພວກມັນເປົ່າວ່າງ; ບໍ່ມີປະໂຫຍດອັນໃດໃນພວກນັ້ນ.[20]ມະນຸດຈະສ້າງພະໄວ້ສໍາລັບຕົນເອງໄດ້ບໍ?
ແຕ່ພວກສິ່ງເຫລົ່ານັ້ນບໍ່ແມ່ນພະ.’[21]ເພາະສະນັ້ນ ເບິ່ງແມ! ເຮົາຈະເຮັດໃຫ້ເຂົາຮູ້ຈັກໃນເວລານີ້, ເຮົາຈະເຮັດໃຫ້ເຂົາຮູ້ຈັກມືຂອງເຮົາ
ແລະລິດທານຸພາບຂອງເຮົາ, ເພື່ອເຂົາທັງຫລາຍຈະຮູ້ວ່າພຣະນາມຂອງເຮົາຄືພຣະຢາເວ.

17 [1]“ບາບຂອງຢູດານັ້ນບັນທຶກໄວ້ດ້ວຍປາກກາເຫລັກ ທີ່ມີປາຍເພັດ. ໄດ້ຈາລຶກໄວ້ເທິງແຜ່ນແຫ່ງຈິດໃຈຂອງພວກເຂົາ
ແລະທີ່ແຈແທ່ນບູຊາຂອງພວກເຂົາທັງຫລາຍ. [2]ແມ້ແຕ່ລູກຫລານຂອງພວກເຂົາກໍລະນຶກເຖິງແທ່ນບູຊາ
ແລະເສົາອາເຊຣາທັງຫລາຍຂ້າງພວກພວກຕົ້ນໄມ້ຂຽວສົດ ແລະເທິງໂນນພູສູງທັງຫລາຍ.

[3]ເສົາອາເຊຣາທັງຫລາຍໄດ້ຕັ້ງຢູ່ເທິງພູເຂົາ ຂອງເຮົາທີ່ແຖວຊົນນະບົດທີ່ຢູ່ກາງທົ່ງກວ້າງ. ບັນດາສິ່ງຂອງ ແລະຊັບສົມບັດທຸກຢ່າງຂອງພວກເຈົ້າ
ເຮົາຈະແຈກຈ່າຍໄປເປັນເຄື່ອງປຸ້ນ, ພ້ອມດ້ວຍ ປູຊະນີຍະສະຖານສູງທັງຫລາຍຂອງພວກເຈົ້າ, ເພາະເຫດແຫ່ງຄວາມບາບທີ່ພວກເຈົ້າໄດ້ເຮັດ
ຕະຫລອດທົ່ວແຜ່ນດິນຂອງພວກເຈົ້າ. [4]ເຈົ້າຈະຕ້ອງປ່ອຍສູນເສຍມໍຣະດົກຊຶ່ງເຮົາໄດ້ຍົກໃຫ້ແກ່ພວກເຈົ້າ.
ເຮົາຈະເຮັດໃຫ້ພວກເຈົ້າບົວລະບັດສັດຕູຂອງພວກເຈົ້າໃນແຜ່ນດິນຊຶ່ງພວກເຈົ້າບໍ່ຮູ້ຈັກ,
ພວກເຈົ້າກໍ່ໄຟແຫ່ງຄວາມຮ້າຍຂຶ້ນຊຶ່ງຈະໄຫມ້ຢູ່ເປັນນິດ.”
[5]ພຣະຢາເວກ່າວດັ່ງນີ້ວ່າ, “ບຸກຄົນທີ່ວາງໃຈໃນມະນຸດກໍເປັນທີ່ສາບແຊ່ງ; ເຂົາເຮັດໃຫ້ເນື້ອຫນັງເປັນກຳລັງຂອງເຂົາ
ແຕ່ຫັນໃຈຂອງເຂົາອອກຈາກພຣະຢາເວ. [6]ເພາະລາວຈະເປັນເຫມືອນພຸ່ມໄມ້ນ້ອຍໆ ທີ່ຢູ່ໃນອາຣາບາ ແລະຈະບໍ່ເຫັນຄວາມສິ່ງດີທີ່ກຳລັງມາເຖິງ
ເຂົາຈະອາໄສຢູ່ໃນແຜ່ນດິນທີ່ແຕກລະແຫງໃນຖິ່ນກັນດານ, ໃນແຜ່ນດິນແຫ້ງແລ້ງທີ່ບໍ່ມີຄົນອາໄສ.
[7]ຄົນທີ່ວາງໃຈໃນພຣະຢາເວຍ່ອມຈະໄດ້ຮັບພຣະພອນ, ເພາະພຣະຢາເວ ເປັນເຫດແຫ່ງຄວາມວາງໃຈຂອງເຂົາ.
[8]ເພາະລາວຈະເປັນເຫມືອນຕົ້ນໄມ້ທີ່ປູກໄວ້ແຄມນ້ຳ, ຊຶ່ງຢັ່ງຮາກຂອງມັນອອກໄປຂ້າງແມ່ນ້ຳ. ມັນບໍ່ຢ້ານຄວາມຮ້ອນເມື່ອແດດສ່ອງມາ.
ເພາະໃບຂອງມັນຂຽວຢູ່ສະເຫມີ, ແລະຈະບໍ່ກະວົນກະວາຍໃນປີທີ່ແຫ້ງແລ້ງ, ແລະມັນບໍ່ຢຸດທີ່ຈະອອກຜົນ.
[9]ຈິດໃຈກໍເປັນໂຕຫລອກລວງຫລາຍກວ່າສິ່ງໃດທັງຫມົດ ມັນເສື່ອມຊາມ; ຜູ້ໃດຈະຮູ້ຈັກໃຈນັ້ນໄດ້? [10]ເຮົາຄືພຣະຢາເວ, ຜູ້ກວດຄົ້ນເບິ່ງຈິດໃຈ
ແລະທົດລອງເບິ່ງໃຈທັງຫລາຍ, ເຮົາໃຫ້ແຕ່ລະຄົນຕາມການປະພຶດຂອງເຂົາ, ຕາມຜົນແຫ່ງການກະທຳຂອງພວກເຂົາ. [11]ນົກກະທາທີ່ຟັກໄຂ່
ຊຶ່ງມັນບໍ່ໃຫ້ອອກເອງ. ບາງຄົນທີ່ໄດ້ຄວາມຮັ່ງມີມາຢ່າງບໍ່ເປັນທຳກໍເຊັ່ນກັນ, ເມື່ອເຖິງກາງໄວ ຄວາມຮັ່ງມີກໍຫວິດຈາກຄົນນັ້ນໄປ,
ແລະໃນຕອນປາຍຂອງລາວ, ລາວຈະເປັນຄົນໂງ່ຈ້າ.”
[12]ສະຖານທີ່ຕັ້ງນະມັດສະການຂອງເຮົາທັງຫລາຍ ເປັນພຣະທີ່ນັ່ງອັນຮຸ່ງເຮືອງ, ຊຶ່ງຕັ້ງຢູ່ສູງຕັ້ງແຕ່ເດີມນັ້ນ. [13]ພຣະຢາເວ
ຊົງເປັນຄວາມຫວັງແຫ່ງອິດສະຣາເອນ. ບັນດາຄົນເຫລົ່ານັ້ນທັງຫມົດທີ່ປະຖິ້ມພຣະອົງຈະຕ້ອງຮັບຄວາມອັບອາຍ.
ບັນດາຄົນທັງປວງທີ່ຫັນໄປຈາກເຮົາຈະຕ້ອງຖືກຈາລຶກໄວ້ໃນຂີ້ຝຸ່ນ. ເພາະພວກເຂົາໄດ້ປະຖິ້ມພຣະຢາເວ ຜູ້ເປັນນ້ຳພຸແຫ່ງຊີວິດ.
[14]ຂໍຊົງຮັກສາຂ້ານ້ອຍ, ຂ້າແດ່ພຣະຢາເວ, ແລ້ວຂ້ານ້ອຍຈະໄດ້ຮັບການຮັກສາ! ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດພົ້ນ, ແລ້ວຂ້ານ້ອຍຈຶ່ງຈະລອດພົ້ນ.
ເພາະພຣະອົງເປັນທີ່ສັນລະເສີນຂອງຂ້ານ້ອຍ.
[15]ເບິ່ງແມ, ເຂົາທັງຫລາຍໄດ້ເວົ້າກັບຂ້າພະອົງວ່າ, ‘ພຣະທັມຂອງພຣະຢາເວຢູ່ທີ່ໃດ? ໃຫ້ມາເຖີດ!’ [16]ສຳລັບຂ້ານ້ອຍແລ້ວ,
ຂ້າພຣະອົງບໍ່ໄດ້ຫນີຈາກໄປການເປັນຜູ້ລ້ຽງແກະທີ່ຕາມພຣະອົງໄປ. ຂ້ານ້ອຍກໍບໍ່ປະສົງວັນແຫ່ງຄວາມຈິບຫາຍ.
ພຣະອົງຊົງຮູ້ເຖິງການປະກາດທັງຫລາຍຊຶ່ງອອກມາຈາກຮີມປາກຂອງຂ້ານ້ອຍ. ມັນກໍຖືກຕ້ອງຕໍ່ພຣະພັກຂອງພຣະອົງ.
[17]ຂໍຢ່າຊົງເປັນເຫດໃຫ້ຂ້ານ້ອຍຢ້ານກົວ. ພຣະອົງຊົງເປັນທີ່ລີ້ໄພຂອງຂ້ານ້ອຍໃນມື້ທີ່ບໍ່ດີ.
[18]ຂໍໃຫ້ພວກທີ່ຂົ່ມເຫັງຂ້ານ້ອຍໃຫ້ເຂົາໄດ້ຮັບຄວາມອັບອາຍ, ແຕ່ຂໍຢ່າໃຫ້ຂ້າພຣະອົງໄດ້ຮັບຄວາມອັບອາຍ. ຂໍໃຫ້ພວກເຂົາໂກດຮ້າຍ,
ແຕ່ຢ່າໃຫ້ຂ້ານ້ອຍໂກດຮ້າຍ. ຂໍຊົງນຳມື້ຮ້າຍມາຕົກເຫນືອພວກເຂົາ, ຂໍຊົງທຳລາຍພວກເຂົາດ້ວຍການທຳລາຍຊ້ຳແລ້ວຊ້ຳອີກ.”
[19]ພຣະຢາເວຊົງກ່າວແກ່ຂ້ານ້ອຍດັ່ງນີ້ວ່າ, “ຈົ່ງໄປຢືນໃນປະຕູແຫ່ງປະຊາຊົນ ຊຶ່ງບັນດາກະສັດແຫ່ງຢູດາສະເດັດເຂົ້າ
ແລະຊຶ່ງພະອົງສະເດັດອອກ, ແລ້ວໃນປະຕູທັງຫລາຍຂອງເຢຣູຊາເລັມ. [20]ຈົ່ງກ່າວແກ່ພວກເຂົາວ່າ, ‘ຈົ່ງຟັງພຣະທັມຂອງພຣະຢາເວ,
ທ່ານທັງຫລາຍຜູ້ເປັນກະສັດຂອງຢູດາ, ແລະບັນດາຄົນຢູດາ ແລະຊາວເຢຣູຊາເລັມທັງຫມົດ ຜູ້ຊຶ່ງເຂົ້າທາງປະຕູເຫລົ່ານີ້.
[21]ພຣະຢາເວຊົງກ່າວດັ່ງນີ້ວ່າ: “ຈົ່ງລະວັງເພື່ອເຫັນແກ່ຊີວິດຂອງພວກເຈົ້າທັງຫລາຍ ແລະຢ່າໄດ້ຫາບຫາມຫຍັງໃນວັນສະບາໂຕ
ເພື່ອນຳຂອງນັ້ນເຂົ້າທາງບັນດາປະຕູນະຄອນເຢຣູຊາເລັມ. [22]ຢ່າຫາບຫາມເຄື່ອງຂອງພວກເຈົ້າອອກຈາກເຮືອນໃນວັນສະບາໂຕ.
ຢ່າເຮັດວຽກໃດໆ, ແຕ່ຈົ່ງຮັກສາວັນສະບາໂຕໄວ້ໃຫ້ບໍລິສຸດ, ດັ່ງທີ່ເຮົາໄດ້ບັນຊາບັນພະບູລຸດຂອງພວກເຈົ້າໄວ້.’” [23]ພວກເຂົາກໍບໍ່ເຊື່ອຟັງ
ຫລືຫງ່ຽງຫູຟັງ, ແຕ່ເຮັດດື້ດ້ານ ເພື່ອຈະບໍ່ໄດ້ຍິນ ແລະ ບໍ່ຮັບຄຳຕັກເຕືອນ.
[24]ສິ່ງນີ້ຈະເກີດຂຶ້ນຖ້າພວກເຈົ້າເຊື່ອຟັງເຮົາແທ້ໆ—ນີ້ເປັນຄຳປະກາດຂອງພຣະຢາເວ—ແລະບໍ່ນຳວຽກໃດໆ
ເຂົ້າມາທາງປະຕູເມືອງນີ້ໃນວັນສະບາໂຕ ແຕ່ຮັກສາວັນສະບາໂຕໃຫ້ບໍລິສຸດ ແລະບໍ່ເຮັດວຽກໃນມື້ນັ້ນ. [25]ແລ້ວຈະມີບັນດາກະສັດ,
ເຈົ້ານາຍທັງຫລາຍ, ແລະຄົນເຫລົ່ານັ້ນຜູ້ປະທັບເທິງບັນລັງແຫ່ງດາວິດ ຈະສະເດັດເຂົ້າທາງປະຕູທັງຫລາຍຂອງເມືອງນີ້ ໂດຍບັນດາລົດມ້າເສິກ
ແລະມ້າທັງຫລາຍ, ພວກເຂົາ ແລະພວກຜູ້ນຳທັງຫລາຍ, ທັງຄົນຢູດາ ແລະຊາວເຢຣູຊາເລັມ, ແລະເມືອງນີ້ຈະດຳລົງຢູ່ເປັນນິດ.
[26]ພວກເຂົາຈະມາຈາກເມືອງຕ່າງໆ ຂອງຢູດາ ແລະຈາກທີ່ຊຶ່ງຢູ່ຮອບນະຄອນເຢຣູຊາເລັມ, ຈາກແຜ່ນດິນເບັນຢາມິນ ແລະຈາກເຂດທົ່ງພຽງ,
ຈາກພູເຂົາທັງຫລາຍ, ແລະຈາກເນເກບ, ນຳເອົາເຄື່ອງເຜົາບູຊາ, ເຄື່ອງສັດບູຊາ ແລະກຳຍານ, ແລະເຄື່ອງບູຊາແຫ່ງການສັນລະເສີນ
ມາທີ່ວິຫານຂອງພຣະຢາເວ. [27]ແຕ່ຖ້າພວກເຈົ້າທັງຫລາຍບໍ່ຟັງເຮົາ—ທີ່ຈະຖືຮັກສາວັນສະບາໂຕໃຫ້ບໍລິສຸດ
ແລະທີ່ຈະບໍ່ແບກພາລະເຂົ້າທາງປະຕູທັງຫລາຍຂອງນະຄອນເຢຣູຊາເລັມໃນວັນສະບາໂຕ—ແລ້ວເຮົາຈະກໍ່ໄຟໄວ້ໃນປະຕູເມືອງເຫລົ່ານັ້ນ ແລະ
ໄຟນັ້ນຈະເຜົາຜານລາຊະວັງທັງຫລາຍຂອງນະຄອນເຢຣູຊາເລັມ ແລະຈະບໍ່ມີໃຜສາມາດຈະດັບໄດ້.”

 generated on Tue Jun 17 19:01:42 2025

18 [1]ພຣະທັມຂອງພຣະຢາເວມາເຖິງເຢເຣມີຢາ ຊຶ່ງກ່າວວ່າ,[2]“ຈົ່ງລຸກຂຶ້ນ ແລະລົງໄປຍັງເຮືອນຂອງຊ່າງປັ້ນຫມໍ້,
ເພາະເຮົາຈະເວົ້າໃຫ້ເຈົ້າໄດ້ຍິນຖ້ອຍຄໍາຂອງເຮົາທີ່ນັ້ນ.”[3]ດ້ວຍເຫດນີ້, ຂ້ານ້ອຍຈຶ່ງລົງໄປທີ່ເຮືອນຂອງຊ່າງປັ້ນຫມໍ້ ແລະເບິ່ງແມ!
ເຫັນຊ່າງປັ້ນຫມໍ້ກໍາລັງຊ່ຽນຫມໍ້ຂອງລາວຢູ່ທີ່ແປ້ນຊ່າງຫມໍ້.[4]ແຕ່ຫມໍ້ດິນກໍາລັງເຮັດນັ້ນໄດ້ແຕກຢູ່ທີ່ມືຂອງຊ່າງປັ້ນຫມໍ້, ດັ່ງນັ້ນ,
ລາວຈຶ່ງໄດ້ປ່ຽນໃຈ ແລະ ປັ້ນປັ້ນພາະຊະນະອັນໃຫມ່ຕາມທີ່ລາວເຫັນວ່າດີ ແລະ ຄວນເຮັດໃນສາຍຕາຂອງລາວ.

[5]ແລ້ວພຣະທັມຂອງພຣະຢາເວຢາເວໄດ້ມາເຖິງຂ້າຂ້ານ້ອຍ, ຊຶ່ງກ່າວວ່າ,[6]“ເຮົາຈະເຮັດກັບເຈົ້າເຫມືອນຊ່າງປັ້ນຫມໍ້ເຮັດບໍ່ໄດ້ບໍ
ເຊື້ອສາຍອິດສະຣາເອນເອີຍ? —ນີ້ເປັນຄໍາປະກາດຂອງພຣະເຈົ້າຢາເວ. ເບິ່ງແມ! ເຫມືອນດິນຫນຽວຢູ່ໃນມືຂອງຊ່າງປັ້ນຫມໍ້ສັນໃດ—
ພວກເຈົ້າກໍຢູ່ໃນມືຂອງເຮົາສັນນັ້ນ, ເຊື້ອສາຍອິດສະຣາເອນເອີຍ.[7]ໃນເວລາດຽວກັນ, ເຮົາຈະປະກາດກ່ຽວກັບປະຊາຊາດຫນຶ່ງ
ຫລືຣາຊະອານາຈັກຫນຶ່ງວ່າ, ຫລືເຮົາຈະຖອນ ຫລືພັງ ຫລືທໍາລາຍເສຍກໍໄດ້.[8]ແຕ່ຖ້າປະຊາຊາດນັ້ນ ຊຶ່ງເຮົາໄດ້ປະກາດໄວ້ແລ້ວ
ຫັນຫນີຈາກການເຮັດຊົ່ວ, ແລ້ວເຮົາກໍຈະຜ່ອນໄພພິບັດທີ່ເຮົາກໍາລັງວາງແຜນຈະເຮັດນັ້ນເສຍ.
[9]ອີກຢ່າງຫນຶ່ງ, ເຮົາໄດ້ປະກາດກ່ຽວກັບປະຊາຊາດຫນຶ່ງ ຫລືຣາຊະອານາຈັກຫນຶ່ງວ່າ, ເຮົາຈະສ້າງຂຶ້ນ ຫລືປູກຝັງໄວ້.
[10]ແຕ່ຖ້າປະຊາຊາດນັ້ນເຮັດຊົ່ວໃນສາຍຕາເຮົາ, ໂດຍບໍ່ເຊື່ອຟັງສຽງຂອງເຮົາ, ແລ້ວເຮົາກໍຈະຢຸດສິ່ງທີ່ດີ
ຊຶ່ງເຮົາກ່າວໄວ້ວ່າເຮົາຈະເຮັດກັບພວກເຂົານັ້ນເສຍ.
[11]ດັ່ງນັ້ນບັດນີ້, ຈົ່ງກ່າວແກ່ຄົນຢູດາ ແລະຜູ້ອາໄສຢູ່ໃນນະຄອນເຢຣູຊາເລັມ ແລະກ່າວວ່າ, ‘ພຣະຢາເວຊົງກ່າວດັ່ງນີ້ວ່າ: ເບິ່ງແມ່,
ເຮົາກໍາລັງກໍໄພພິບັດຕໍ່ພວກເຈົ້າ. ແລະຄິດວາງແຜນການຢ່າງຫນຶ່ງຕໍ່ສູ້ກັບພວກເຈົ້າ.
ພວກເຈົ້າແຕ່ລະຄົນຈົ່ງກັບໃຈຈາກການເຮັດຊົ່ວຂອງພວກເຈົ້າ, ແລະການກະທໍາຂອງພວກເຈົ້າ ເພື່ອທາງທັງຫລາຍຂອງພວກເຈົ້າ,
ແລະການກະທໍາຂອງພວກເຈົ້າຈະນໍາຄວາມດີມາສູ່ພວກເຈົ້າ.’[12]ແຕ່ພວກເຂົາຈະຕອບວ່າ, ‘ນີ້ບໍ່ມີປະໂຫຍດຫຍັງດອກ.
ພວກເຮົາຈະດໍາເນີນຕາມແຜນງານທັງຫລາຍຂອງພວກເຮົາ. ແຕ່ລະຄົນຈະທໍາໃນສິ່ງຊົ່ວຮ້າຍ, ຄືຄວາມປາດຖາຫນາຂອງຈິດໃຈທີ່ດື້ດ້ານ.'
[13]ເພາະສະນັ້ນ ພຣະຢາເວຈຶ່ງຊົງກ່າວດັ່ງນີ້ວ່າ, ຈົ່ງຖາມບັນດາປະຊາຊາດ, ໃຜເຄີຍໄດ້ຍິນສິ່ງນີ້ແດ່?
ອິດສະຣາເອນພົມມາຈາລີໄດ້ເຮັດສິ່ງຫນຶ່ງອັນຫນ້າຢ້ານຫລາຍ.[14]ຫິມະໃນເລບານອນເຄີຍໄປຈາກເນີນເຜົາຫີນທັງຫລາຍເທິງດ້ານຂອງມັນບໍ?
ບັນດານ້ໍາຈາກພູເຂົາທີ່ໄຫລມາຈາກທີ່ໄກ, ສາຍນ້ໍາເຢັນເຫລົ່ານັ້ນ ເຄີຍຖືກທໍາລາຍໄປຫລື?
[15]ແຕ່ປະຊາຊົນຂອງເຮົາໄດ້ລືມເຮົາເສຍ. ພວກເຂົາໄດ້ເຜົາເຄື່ອງຫອມບູຊາແກ່ພວກຮູບເຄົາລົບທີ່ບໍ່ມີປະໂຫຍດ
ແລະໄດ້ລົ້ມລົງເທິງເດີນຕາມທາງຂອງພວກເຂົາ; ພວກເຂົາ ໄດ້ຈາກທາງໂບຮານທັງຫລາຍ ເພື່ອເຂົ້າໄປທີ່ທາງຊອຍທັງຫລາຍ.
[16]ແຜ່ນດິນຂອງພວກເຂົາຈະກາຍເປັນທີ່ຫນ້າຕື່ນຕົກໃຈ, ຈະກາຍເປັນສິ່ງຢ້ານກົວ, ແລະເປັນສິ່ງທີ່ຖືກເຍາະເຍີຍຢູ່ເປັນນິດ.
ຄົນທັງປວງທີ່ຜ່ານໄປຈະຕົວສັ່ນ, ແລະແກວ່ງຫົວຂອງເຂົາ.[17]ເຮົາຈະກະຈາຍພວກເຂົາຕໍ່ຫນ້າສັດຕູຂອງພວກເຮົາ ເຫມືອນລົມຕາເວັນອອກ.
ເຮົາຈະຫັນຫລັງໃສ່ພວກເຂົາ, ແລະຈະບໍ່ຫັນຫນ້າໃສ່ໃຫ້ໃນວັນແຫ່ງໄພພິບັດມາເຖິງຂອງພວກເຂົານັ້ນ.'"
[18]ດັ່ງນັ້ນພວກປະຊາຊົນໄດ້ກ່າວວ່າ, “ມາເຖີດ, ໃຫ້ເຮົາຄິດແຜນປອງຮ້າຍເຢເຣມີຢາ,
ເນື່ອງດ້ວຍວ່າທໍາມະບັນຍັດບໍ່ຄວນຈະສູນຫາຍໄປຈາກພວກປະໂລຫິດ, ຫລືຈາກຄໍາປຶກສາຈາກພວກນັກປາດ,
ຫລືຈາກບັນດາຖ້ອຍຄໍາເຫລົ່ານັ້ນຂອງຜູ້ປະກາດພຣະທໍາ. ມາເຖີດ, ເຮົາໂຈມຕີເຂົາດ້ວຍບັນດາຖ້ອຍຄໍາຂອງພວກເຮົາ
ແລະຢ່າໄປສົນໃຈຕໍ່ສິ່ງທີ່ເຂົາໄດ້ປະກາດເລີຍ.”[19]ຂ້າແດ່ພຣະຢາເວ, ຂໍພຣະອົງຊົງຟັງຂ້ານ້ອຍ,
ແລະຂໍຈົ່ງຟັງສຽງພວກສັດຕູຂອງຂ້ານ້ອຍແດ່ທ້ອນ.[20]ຄວາມພິນາດຈາກພວກເຂົາຈະເປັນລາງວັນຂອງຂ້ານ້ອຍ
ສໍາລັບການເຮັດດີຕໍ່ພວກເຂົາຫລື? ເພາະພວກເຂົາໄດ້ຂຸດຂຸມໄວ້ສໍາລັບຂ້ານ້ອຍ. ຂໍຊົງລະນຶກວ່າ, ຂ້ານ້ອຍຢືນເຝົ້າພຣະອົງຢ່າງໃດ
ເພື່ອທູນຂໍສະຫວັດດີພາບແກ່ພວກເຂົາ, ເພື່ອຈະຫັນຄວາມໂກດຮ້າຍຂອງພຣະອົງໄປເສຍຈາກພວກເຂົາ.
[21]ດັ່ງນັ້ນ ຂໍຊົງມອບລູກຫລານຂອງເຂົາໃຫ້ແກ່ຄວາມອຶດຢາກອາຫານ, ແລະຂໍຊົງມອບພວກເຂົາໃຫ້ແກ່ຄົນເຫລົ່ານັ້ນທີ່ໃຊ້ດາບ. ດັ່ງນັ້ນ
ຂໍໃຫ້ເມຍຂອງພວກເຂົາໄດ້ກາຍເປັນຜູ້ສູນເສຍ, ແລະເປັນແມ່ຫມ້າຍ, ແລະພວກລູກຊາຍຂອງພວກເຂົາຂ້າຕາຍດ້ວຍດາບໃນສົງຄາມ.
[22]ຂໍໃຫ້ໄດ້ຍິນສຽງຄວາມທຸກຮ້ອງມາຈາກເຮືອນຂອງພວກເຂົາ, ເມື່ອພຣະອົງຊົງນໍາຜູ້ບຸກລຸກມາປຸ້ນເຂົາຢ່າງບໍ່ຮູ້ຕົວ.
ເພາະພວກເຂົາໄດ້ຂຸດຂຸມໄວ້ດັກຂ້ານ້ອຍ ແລະໄດ້ເຮັດແຮ້ວດັກສໍາລັບຈັບຂ້ານ້ອຍ.[23]ແຕ່ພຣະອົງເອງ, ຂ້າແດ່ພຣະຢາເວ,
ພຣະອົງຊົງຮູ້ຈັກແຜນການສັງຫານທັງຫລາຍຂອງເຂົາທີ່ຈະຂ້າ ຂ້ານ້ອຍແລ້ວ. ຂໍຢ່າຊົງອະໄພຄວາມຊົ່ວ
ແລະຄວາມຜິດບາບທັງຫລາຍຂອງພວເຂົາໄປເສຍຈາກພຣະອົງ. ແຕ່ຂໍໃຫ້ພວກເຂົາຖືກລົ້ມລົງຕໍ່ພຣະພັກພຣະອົງ.
ຂໍຊົງຈັດການເຂົາທັງຫລາຍໃນເວລາແຫ່ງຄວາມໂກດຮ້າຍຂອງພຣະອົງທ້ອນ.

 generated on Tue Jun 17 19:01:42 2025

19 [1]ພຣະຢາເວຊົງກ່າວວ່າ, "ຈົ່ງໄປ ແລະຊື້ ຫມໍ້ດິນຂອງຊ່າງປັ້ນຫມໍ້ມາຫນຶ່ງຫນ່ວຍ ຂະນະທີ່ເຈົ້າຢູ່ກັບພວກຫົວຫນ້າຂອງປະຊາຊົນ
ແລະພວກປະໂລຫິດ. [2]ແລ້ວຈົ່ງໄປທີ່ຮ່ອມພູເບັນຮິນໂນມ ອອກໄປທາງປະຕູກອງເສດຫມໍ້ດິນແຕກ,
ແລະທີ່ນັ້ນຈົ່ງປ່າວຮ້ອງບັນດາຖ້ອຍຄໍາທີ່ເຮົາໄດ້ບອກເຈົ້າ. [3]ຈົ່ງກ່າວວ່າ, ‘ຂໍຈົ່ງຟັງພຣະທັມຂອງພຣະຢາເວ, ຂ້າແດ່ບັນດາກະສັດຂອງແຫ່ງຢູດາ
ແລະຊາວນະຄອນເຢຣູຊາເລັມ! ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, "ເບິ່ງແມ,
ແລະເຮົາຈະນໍາໄພພິບັດມາເຖິງສະຖານທີ່ແຫ່ງນີ້, ແລະບັນດາຫູຂອງທຸກຄົນທີ່ໄດ້ຍິນເຖິງສິ່ງນີ້ຈະອື້ໄປ.

[4]ເຮົາຈະເຮັດສິ່ງນີ້ ເພາະພວກເຈົ້າໄດ້ລະປະຖິ້ມເຮົາ ແລະໄດ້ເຮັດໃຫ້ສະຖານທີ່ນີ້ເສື່ອມເສຍ.
ໃນສະຖານທີ່ນີ້ພວກເຂົາໄດ້ເຜົາຖວາຍບູຊາແກ່ເທບພະເຈົ້າອື່ນໆ ທີ່ພວກເຂົາບໍ່ຮູ້ຈັກ. ພວກເຂົາເອງ ຫລືບັນພະບູລຸດຂອງພວກເຂົາ
ຫລືພວກກະສັດຢູດາເຮັດໃຫ້ສະຖານທີ່ນັ້ນເຕັມໄປດ້ວຍບໍ່ເລືອດຂອງຜູ້ບໍ່ໄດ້ມີຄວາມຜິດ. [5]ພວກເຂົາໄດ້ສ້າງສະຖານທີ່ສູງສໍາລັບພະບາອານ
ເພື່ອຈະເຜົາບັນດາລູກຊາຍຂອງເຂົາໃນໄຟ ເປັນເຄື່ອງບູຊາເຜົາທັງເປັນແກ່ພະບາອານ—ສິ່ງນີ້ເຮົາບໍ່ໄດ້ສັ່ງບູຊາ ຫລືກ່າວໄວ້,
ຫລືໄດ້ນຶກໃນໃຈຂອງເຮົາເລີຍ.
[6]ສະນັ້ນ, ເບິ່ງແມ, ວັນທັງຫລາຍກໍາລັງຈະມາເຖິງ—ນີ້ເປັນຄໍາປະກາດຂອງພຣະຢາເວ—ເມື່ອສະຖານທີ່ນີ້ຈະບໍ່ໄດ້ເອີ້ນວ່າໂຕເຟັດ,
ຫລືຮ່ອມພູເບັນຮິນໂນມອີກ, ແຕ່ຈະຖືກເອີ້ນວ່າຮ່ອມພູແຫ່ງການຂ້າຟັນ. [7]ໃນສະຖານທີ່ນີ້ ເຮົາຈະທໍາລາຍແຜນການທັງປວງຂອງຢູດາ
ແລະນະຄອນເຢຣູຊາເລັມທີ່ບໍ່ເປັນປະໂຫຍດ. ເຮົາຈະເຮັດໃຫ້ພວກເຂົາລົ້ມລົງດ້ວຍດາບຕໍ່ຫນ້າບັນດາສັດຕູຂອງພວກເຂົາ
ແລະດ້ວຍມືຂອງບັນດາຜູ້ສະແຫວງຫາຊີວິດຂອງພວກເຂົາ. ແລ້ວເຮົາຈະໃຫ້ຊາກສົບຂອງພວກເຂົາເປັນອາຫານຂອງພວກນົກໃນອາກາດ
ແລະບັນດາສັດປ່າເທິງແຜ່ນດິນໂລກ. [8]ແລ້ວເຮົາຈະເຮັດໃຫ້ເມືອງນີ້ຖືກທໍາລາຍ ແລະເປັນສິ່ງທີ່ຖືກເຍາະເຍີ້ຍ ເພາະທຸກຄົນທີ່ຜ່ານໄປຈະຢ້ານກົວ
ແລະຈະເຍາະເຍີ້ຍໃນໄພພິບັດທັງສິ້ນຂອງພວກເຂົາ. [9]ເຮົາຈະເຮັດພວກເຂົາກິນຊີ້ນຂອງລູກຊາຍ ແລະລູກສາວຂອງພວກເຂົາ;
ແຕ່ລະຄົນຈະກິນຊີ້ນຂອງເພື່ອນບ້ານຂອງພວກເຂົາ. ໃນການທີ່ຖືກລ້ອມ ແລະເຈັບປວດໃຈທີ່ສັດຕູຂອງເຂົາ ໄດ້ນໍາມາ
ແລະຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ."'
[10]ແລ້ວເຈົ້າຈະເຮັດເຫຍືອກໃຫ້ແຕກຕໍ່ຫນ້າຕໍ່ຕາຄົນທັງຫລາຍທີ່ມານໍາກັນກັບເຈົ້ານັ້ນ. [11]ເຈົ້າຈະກ່າວແກ່ພວກເຂົາວ່າ,
'ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ເຮົາຈະເຮັດສິ່ງທີ່ເຫມືອນກັນນີ້ໃຫ້ຊົນຊາດນີ້ ແລະເມືອງນີ້—ນີ້ເປັນຄໍາປະກາດຂອງພຣະຢາເວ—
ເຊັ່ນດຽວກັບທີ່ເຢເອມີຢາເຮັດໃຫ້ພາຊະນະຂອງຊ່າງປັ້ນຫມໍ້ແຕກ ດັ່ງນັ້ນມັນບໍ່ສາມາດສ້ອມແປງໄດ້ອີກ.
ປະຊາຊົນຈະຝັງຄົນຕາຍໄວ້ໃນໂຕເຟັດ ຈົນບໍ່ມີທີ່ສໍາລັບໃຫ້ຝັງຄົນຕາຍອີກ.
[12]ນີ້ຄືສິ່ງເຮົາຈະເຮັດຕໍ່ສະຖານທີ່ ແລະຄົນຜູ້ຢູ່ໃນເມືອງນີ້ ເມື່ອເຮົາເຮັດໃຫ້ເປັນເຫມືອນໂຕເຟັດ—ນີ້ເປັນຄໍາປະກາດຂອງພຣະຢາເວ—[13]ດັ່ງນັ້ນ
ບັນດາເຮືອນໃນນະຄອນເຢຣູຊາເລັມ ແລະກະສັດທັງຫລາຍແຫ່ງຢູດາຈະເຫມືອຍໂຕເຟັດ—ຄືບັນດາບ້ານທີ່ເທິງຫລັງຄາເຮືອນເຫລົ່ານີ້
ພວກປະຊາຊົນທີ່ບໍ່ສະອາດນະມັດສະການດາວທຸກດວງໃນທ້ອງຟ້າ ແລະ ເທເຄື່ອງບູຊາຖວາຍແກ່ພະອື່ນໆ.'"
[14]ແລ້ວຢາເຣມີຢາໄດ້ໄປຈາກໂຕເຟັດທີ່ ຊຶ່ງພຣະຢາເວຊົງໃຊ້ໃຫ້ເຂົາໄປປະກາດພຣະທໍາຢູ່ທີ່ນັ້ນ.
ເຂົາກໍຢືນຢູ່ໃນພະລານຫີນພຣະວິຫານຂອງພຣະຢາເວ ແລະ ເຂົາກ່າວແກ່ປະຊາຊົນທັງປວງວ່າ, [15]“ພຣະຢາເວຈອມໂຍທາ
ພຣະເຈົ້າແຫ່ງອິດສະຣາເອນຊົງກ່າວ ດັ່ງນີ້ວ່າ, “ ນີ້ແຫລະ, ເຮົາຈະນໍາໄພພິບັດທັງຫລາຍ ຊຶ່ງເຮົາໄດ້ບອກ່າວມາໃຫ້ເມືອງນີ້,
ແລະບັນດາຫົວເມືອງທັງຫລາຍ ດັ່ງທີ່ເຮົາໄດ້ປະກາດໄວ້ແລ້ວ, ເພາະພວກເຂົາໄດ້ດື້ດ້ານ ແລະປະຕິເສດບໍ່ເຊື່ອຟັງບັນດາຖ້ອຍຄໍາຂອງເຮົາ.’”

20 [1]ເມື່ອປັດຊູ ລູກຊາຍຂອງອິມເມ—ຜູ້ເປັນປະໂລຫິດ ແລະ ເປັນຫົວຫນ້າໃຫຍ່ພວກຜູ້ຮັບໃຊ້ໃນພຣະວິຫານ—
ໄດ້ຍິນເຢເຣມີຢາຜູ້ປະກາດພຣະທຳເວົ້າດັ່ງນີ້. [2]ເພິ່ນກໍຕີເຢເຣມີຢາຜູ້ປະກາດພຣະທັມ ແລະຈັບໃສ່ກັບຕີນໄວ້ໃນປະຕູສູງ
ເບັນຢາມິນທີ່ວິຫານຂອງພຣະຢາເວນັ້ນ.

[3]ພໍເຖິງເຊົ້າມື້ໃຫມ່ມາ ເມື່ອປັດຊູ ໄດ້ນຳເອົາເຢເຣມີຢາອອກຈາກກັບຕີນ. ໃນຂະນະນັ້ນ ເຢເຣມີຢາເວົ້າຕໍ່ປັດຊູວ່າ,
"ພຣະຢາເວບໍ່ໄດ້ເອີ້ນພວກເຈົ້າວ່າປັດຊູ ແຕ່ຈະເອີ້ນພວກເຈົ້າວ່າ ມາໂກຣມິດສາບິບ. [4]ເພາະພຣະຢາເວຊົງກ່າວດັ່ງນີ້ວ່າ: 'ເບິ່ງແມ,
ເຮົາຈະເຮັດໃຫ້ພວກເຈົ້າເປັນສິ່ງທີ່ຫນ້າຢ້ານກົວວຸ້ນວາຍ, ເຈົ້າແລະມິດສະຫາຍຂອງພວກເຈົ້າຢ້ານກົວ,
ເພາະພວກເຂົາຈະລົ້ມຕາຍດ້ວຍດາບຂອງສັດຕູ ແລະດວງຕາຂອງພວກເຈົ້າຈະເບິ່ງຢູ່.
ເຮົາຈະມອບຊາວຢູດາທັງປວງຢູ່ໃຕ້ອຳນາດຂອງກະສັດບາບີໂລນ. ເຂົາຈະກວາດຈັບເອົາພວກເຂົາໄປເປັນຊະເລີຍທີ່ເມືອງບາບີໂລນ
ຫລືໂຈມຕີພວກເຂົາດ້ວຍດາບ.
[5]ເຮົາຈະຍົກຊັບສົມບັດ ຄວາມຮັ່ງມີ ແລະສິ່ງຂອງມີຄ່າທັງປວງໃນເມືອງນີ້, ແລະລາຊະສົມບັດອັນມີຄ່າທັງປວງຂອງບັນດາກະສັດຢູດາ.
ເຮົາຈະມອບທຸກ ສິ່ງເຫລົ່ານີ້ໄວ້ໃນມືຂອງສັດຕູຂອງພວກເຂົາທັງຫລາຍ, ແລະພວກເຂົາຈະຢຶດມັນໄວ້. ພວກເຂົາຢຶດເອົາ ແລະ
ນຳໄປຍັງເມືອງບາບີໂລນ. [6]ແຕ່ສຳລັບເຈົ້າ, ປັດຊູ ແລະ ຄອບຄົວຂອງເຈົ້າຈະຕ້ອງໄປເປັນຊະເລີຍ ເຈົ້າຈະຖືກຈັບໄປຍັງບາບີໂລນ
ແລະຈະຕາຍຢູ່ທີ່ນັ້ນ. ທຸກຄົນທີ່ເຈົ້າຮັກຜູ້ຊຶ່ງເຈົ້າໄດ້ກ່າວພຣະທຳບໍ່ຈິງຈະຖືກຝັງທີ່ນັ້ນ.'"
[7]"ຂ້າແດ່ພຣະຢາເວ, ພຣະອົງຊົງໄດ້ຫລອກລວງຂ້ານ້ອຍ ແລະຂ້ານ້ອຍກໍຖືກຫລອກລວງ. ພຣະອົງຊົງມີກຳລັງຫລາຍກວ່າຂ້ານ້ອຍ
ແລະພຣະອົງກໍຊະນະ. ຂ້ານ້ອຍໄດ້ກາຍເປັນທີ່ໃຫ້ເຂົາຫົວຂວັນ; ທຸກຄົນເຍາະເຍີ້ຍຂ້ານ້ອຍ. [8]ເພາະວ່າເມື່ອໃດທີ່ຂ້ານ້ອຍໄດ້ເວົ້າ,
ຂ້ານ້ອຍຮ້ອງໃຫ້ຊ່ວຍ ຂ້ານ້ອຍກ່າວວ່າ, 'ຄວາມທາລຸນ ແລະການທຳລາຍ.'
ແລ້ວພຣະທັມຂອງພຣະຢາເວໄດ້ເປັນເຫດໃຫ້ຂ້ານ້ອຍເປັນທີ່ຕຳຫນິ ແລະເຍາະເຍີ້ຍທຸກມື້. [9]ແລ້ວຂ້ານ້ອຍກ່າວວ່າ,
'ຂ້ານ້ອຍຈະບໍ່ອ້າງເຖິງພຣະຢາເວອີກຕໍ່ໄປ. ຂ້ານ້ອຍຈະບໍ່ກ່າວໃນພຣະນາມຂອງພຣະອົງອີກ.'
ແຕ່ກໍມີສິ່ງເຫມືອນໄຟໄຫມ້ຢູ່ໃນໃຈຂອງຂ້ານ້ອຍ, ອັດຢູ່ໃນກະດູກຂອງຂ້ານ້ອຍ. ດັ່ງນັ້ນຂ້ານ້ອຍກໍຕໍ່ສູ້ເພື່ອອັດມັນໄວ້,
ແຕ່ຂ້ານ້ອຍກໍບໍ່ສາມາດອັດໄວ້ໄດ້.
[10]ຂ້ານ້ອຍໄດ້ຍິນສຽງຊຸບຊິບຂ່າວລືຄວາມຕົກໃຈຢ້ານຈາກປະຊາຊົນ ເປັນຈຳນວນຫລາຍຢູ່ຮອບທຸກດ້ານ. 'ໃສ່ຄວາມລາວ!
ໃຫ້ເຮົາໃສ່ຄວາມລາວ!" ຄົນເຫລົ່ານັ້ນທີ່ຄຸ້ນເຄີຍທັງຫມົດຂອງຂ້ານ້ອຍ ເຝົ້າເບິ່ງຄວາມຫລົ້ມຈົມຂອງຂ້ານ້ອຍ. ກ່າວວ່າ,
"ບາງທີລາວອາດຈະຖືກຫລອກລວງ. ຖ້າເປັນດັ່ງນັ້ນ, ພວກເຮົາສາມາດທີ່ຈະຊະນະລາວໄດ້
ແລະຈະແກ້ແຄ້ນລາວ." [11]ແຕ່ພຣະຢາເວຊົງຢູ່ຂ້າງຂ້ານ້ອຍ ດັ່ງນັກຮົບທີ່ຫນ້າຢ້ານກົວ, ເພາະສະນັ້ນຜູ້ຂົ່ມເຫັງຂ້ານ້ອຍຈະສະດຸດ,
ເພາະພວກເຂົາຈະບໍ່ຊະນະຂ້ານ້ອຍ. ພວກເຂົາຈະອັບອາຍຂາຍຫນ້າ, ເພາະພວກເຂົາຈະບໍ່ຈະເລີນຂຶ້ນ.
ພວກເຂົາຄວາມອັບອາຍໄຮ້ກຽດເປັນນິດ, ມັນຈະບໍ່ມີວັນລືມ.
[12]ແຕ່ພຣະອົງ, ຂ້າແດ່ພຣະຢາເວຈອມໂຍທາ, ຜູ້ຊົງທົດລອງຄົນຊອບທຳ ແລະຜູ້ທອດພຣະເນດທັງຈິດ ແລະໃຈ.
ຂໍໃຫ້ຂ້ານ້ອຍໄດ້ເຫັນການແກ້ແຄ້ນຂອງພຣະອົງເຫນືອພວກເຂົາທັງຫລາຍ. ເພາະຂ້ານ້ອຍໄດ້ເວົ້າສະເຫນີຄະດີຂອງຂ້ານ້ອຍຕໍ່ພຣະອົງແລ້ວ.
[13]ຈົ່ງຮ້ອງເພັງຖວາຍແດ່ພຣະຢາເວ! ຈົ່ງສັນລະເສີນພຣະຢາເວ!
ເພາະວ່າພຣະອົງຊົງຊ່ວຍຊີວິດຂອງຜູ້ທີ່ຖືກກົດຂີ່ຂົ່ມເຫງໃຫ້ພົ້ນຈາກມືຂອງຜູ້ເຮັດຄວາມຊົ່ວຮ້າຍທັງຫລາຍ.
[14]ຂໍໃຫ້ມື້ທີ່ຂ້ານ້ອຍເກີດມານັ້ນຖືກສາບແຊ່ງ. ຢ່າໃຫ້ມື້ທີ່ແມ່ຂອງຂ້ານ້ອຍເກີດຂ້ານ້ອຍໄດ້ຮັບພອນ. [15]ຂໍໃຫ້ຊາຍຄົນນັ້ນຖືກສາບແຊ່ງ,
ຄືຄົນທີ່ນຳຂ່າວໄປບອກພໍ່ຂ້ານ້ອຍວ່າ, 'ລູກຊາຍຄົນຫນຶ່ງເກີດມາແກ່ທ່ານແລ້ວ,' ອັນຈະເຮັດໃຫ້ພໍ່ມີຄວາມຍິນດີຫລາຍ.
[16]ຂໍໃຫ້ຊາຍຄົນນັ້ນເຫມືອນກັບບັນດາເມືອງ ຊຶ່ງພຣະຢາເວຊົງລົ້ມເສຍ ແລະພຣະອົງບໍ່ໄດ້ຊົງມີຄວາມເມດຕາກັບພວກເຂົາ.
ຂໍໃຫ້ພຣະອົງໄດ້ຍິນສຽງຮ້ອງໃຫ້ຊ່ວຍໃນຕອນເຊົ້າ, ແລະໃຫ້ໄດ້ຍິນສຽງໂວຍວາຍໃນຕອນທ່ຽງ,
[17]ເພາະພວກເຂົາບໍ່ໄດ້ຂ້າຂ້ານ້ອຍເສຍຕັ້ງແຕ່ໃນມົດລູກ, ຂໍໃຫ້ແມ່ຂອງຂ້ານ້ອຍເປັນຂຸມຝັງສົບຂອງຂ້ານ້ອຍ,
ແລະມົດລູກນັ້ນຈະໄດ້ຕັ້ງຄັນຢູ່ເປັນນິດ. [18]ເປັນຫຍັງຂ້ານ້ອຍຈຶ່ງອອກມາຈາກມົດລູກ ມາເຫັນຄວາມລຳບາກ ແລະຄວາມທຸກ,
ດັ່ງນັ້ນວັນຄືນທັງຫລາຍຂອງຂ້ານ້ອຍ ກໍເຕັມໄປດ້ວຍຄວາມອັບອາຍ?"

 generated on Tue Jun 17 19:01:42 2025

21 [1]ພຣະທັມຈາກພຣະຢາເວໄດ້ມາເຖິງເຢເຣມີຢາ ເມື່ອກະສັດເຊເດກີຢາໄດ້ຊົງໃຊ້ໃຫ້ປັດຊູ ລູກຊາຍມັນກີຢາ
ແລະເຊຟານີຢາລູກຊາຍມາອາເສຢາໄປຫາເຢເຣມີຢາ ພວກເຂົາກ່າວກັບເພິ່ນວ່າ,
[2]“ຂໍຈົ່ງສະແຫວງຖາມຄຳແນະນຳຈາກພຣະຢາເວໃນນາມຂອງພວກເຮົາ, ເພາະເນບູກາດເນັດຊາ ກະສັດບາບີໂລນກຳລັງເຮັດສົງຄາມກັບເຮົາ.
ບາງທີພຣະຢາເວຈະຊົງກະທຳບັນດາລາຊະກິດອັນມະຫັດສະຈັນຕ່າງໆ ເພື່ອພວກເຮົາ, ເຊັ່ນດຽວກັບໃນເວລາອະດີດທັງຫລາຍ,
ແລະຈະຊົງເຮັດໃຫ້ເນບູກາດເນັດຊາຖອຍທັບໄປຈາກເຮົາ.”

[3]ດັ່ງນັ້ນເຢເຣມີຢາບອກພວກເຂົາທັງສອງວ່າ, “ນີ້ເປັນສິ່ງທີ່ເຈົ້າຈະຕ້ອງເວົ້າແກ່ເຊເດກີຢາ ຄື,[4]‘ພຣະຢາເວ
ພຣະເຈົ້າແຫ່ງອິດສະຣາເອນຊົງກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຈະຫັນອາວຸດທັງຫລາຍທີ່ຢູ່ໃນມືຂອງພວກເຈົ້າກັບມາ,
ຊຶ່ງພວກເຈົ້າໃຊ້ສູ້ຮົບກັບກະສັດແຫ່ງບາບີໂລນ ແລະຄົນບາບີໂລນ ແລະຄົນເຄນເຄຍ ຊຶ່ງກຳລັງປິດລ້ອມພວກເຈົ້າຢູ່ນອກກຳແພງ!
ເພາະເຮົາຈະຮວບຮວມພວກມັນມາໄວ້ໃນໃຈກາງເມືອງນີ້.[5]ເຮົາເອງຈະຕໍ່ສູ້ກັບພວກເຈົ້າດ້ວຍມືທີ່ຍົກຊູຂຶ້ນ ແລະດ້ວຍແຂນທີ່ແຂງແຮງ,
ແລະດ້ວຍຄວາມຮ້າຍ, ດ້ວຍຄວາມຮ້ອນຮົນ, ແລະຄວາມໂກດຮ້າຍຢ່າງຮຸນແຮງ.
[6]ເພາະເຮົາຈະໂຈມຕີບັນດາຜູ້ອາໄສຢູ່ໃນເມືອງນີ້, ທັງຄົນ ແລະສັດ ແລ້ວພວກເຂົາຈະຕາຍລົງດ້ວຍພະຍາດລະບາດຢ່າງຫນັກ.[7]ຫລັງຈາກນີ້—
ນີ້ເປັນຄຳປະກາດຂອງພຣະຢາເວກ່າວ—ເຮົາຈະມອບເຊເດກີຢາກະສັດຂອງຢູດາ ແລະບັນດາຂ້າລາຊະການຂອງລາວ
ແລະປະຊາຊົນເມືອງນີ້ຊຶ່ງລອດຕາຍຈາກພະຍາດລະບາດ, ຈາກດາບ, ແລະການອຶດຫິວອາຫານ
ໄວ້ໃນມືຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ, ແລະມອບໄວ້ໃນມືຂອງສັດຕູຂອງພວກເຂົາທັງຫລາຍ,
ໃນມືຂອງຄົນເຫລົ່ານັ້ນທີ່ສະແຫວງຫາຊີວິດຂອງພວກເຂົາ. ພຣະອົງຈະຟັນພວກເຂົາເສຍດ້ວຍຄົມດາບ, ພຣະອົງຈະບໍ່ສົງສານພວກເຂົາ,
ຫລືໄວ້ຊີວິດເຂົາ, ຫລືມີຄວາມເມດຕາຕໍ່ພວກເຂົາ.’
[8]ແລ້ວເຈົ້າຈົ່ງເວົ້າກັບຊົນຊາດນີ້ວ່າ, ‘ພຣະຢາເວຊົງກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາກຳລັງຕັ້ງການດຳເນີນຊີວິດ ແລະ
ທາງແຫ່ງຄວາມຕາຍໄວ້ຕໍ່ຫນ້າພວກເຈົ້າ.[9]ຄົນໃດກໍຕາມທີ່ຢູ່ໃນເມືອງນີ້ຈະຕາຍເສຍດ້ວຍດາບ, ດ້ວຍການອຶດຫິວອາຫານ,
ແລະດ້ວຍພະຍາດລະບາດ; ແຕ່ຜູ້ໃດກໍຕາມທີ່ອອກໄປ ແລະທຸກຫົວເຂົາຈະລົ້ມລົງຕໍ່ຫນ້າຄົນເຄນເຄຍ ຜູ້ປິດລ້ອມຢູ່ນັ້ນເຂົາກໍຈະມີຊີວິດຢູ່ໄດ້.
ເຂົາຈະລົບຫນີໄປດ້ວຍຊີວິດຂອງຕົນ.[10]ເພາະເຮົາໄດ້ມຸ້ງຫນ້າຕໍ່ສູ້ເມືອງນີ້ ດ້ວຍຄວາມຮ້າຍ ແລະບໍ່ແມ່ນດ້ວຍຄວາມດີ—
ນີ້ເປັນຄຳປະກາດຂອງພຣະຢາເວ. ຄືເມືອງນີ້ຈະຖືກມອບໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະເພິ່ນຈະເຜົາມັນເສຍດ້ວຍໄຟ.’
[11]ຈົ່ງກ່າວຕໍ່ເຊື້ອສາຍຂອງກະສັດຢູດາວ່າ, ຈົ່ງຟັງພຣະທັມຂອງພຣະຢາເວ.[12]ເຊື້ອສາຍດາວິດເອີຍ, ພຣະຢາເວຊົງກ່າວດັ່ງນີ້ວ່າ,
‘ຈົ່ງໃຫ້ຄວາມຍຸດຕິທຳໃນຕອນເຊົ້າ. ຈົ່ງຊ່ວຍຜູ້ທີ່ຖືກປຸ້ນໃຫ້ພົ້ນຈາກມືຜູ້ທີ່ກົດຂີ່ຂົ່ມເຫງ, ຢ້ານວ່າຄວາມພິໂລດຂອງເຮົາຈະອອກໄປເຫມືອນໄຟ,
ແລະເຜົາໄຫມ້ຢ່າງທີ່ບໍ່ມີໃຜດັບໄດ້, ເພາະການກະທຳອັນຊົ່ວຮ້າຍຂອງພວກເຈົ້າທັງຫລາຍ.
[13]ເບິ່ງແມ, ພວກທີ່ອາໄສຢູ່ຫຸບເຂົາເອີຍ! ເຮົາຕໍ່ສູ້ພວກເຈົ້າ, ສີລາແຫ່ງທົ່ງພຽງເອີຍ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເຮົາກຳລັງຕໍ່ສູ້ກັບໃຜກໍຕາມທີ່ກຳລັງກ່າວວ່າ, “ໃຜຈະລົງມາຕໍ່ສູ້ກັບເຮົາ?” ຫລື
“ໃຜຈະເຂົ້າມາໃນບ່ອນຢູ່ອາໄສຂອງເຮົາ?”[14]ເຮົາຈະລົງໂທດຕາມຜົນແຫ່ງການກະທຳຂອງພວກເຈົ້າໃຫ້ມາຕໍ່ສູ້ພວກເຈົ້າ—
ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະກໍໄຟໄວ້ໃນປ່າຕ່າງໆ ແລະໄຟນັ້ນຈະເຜົາຜານສິ່ງຕ່າງໆທີ່ຢູ່ຮອບເມືອງນັ້ນ.’”


generated on Tue Jun 17 19:01:42 2025

22 [1]ນີ້ຄືສິ່ງທີ່ພຣະຢາເວຊົງກ່າວດັ່ງນີ້ວ່າ, “ຈົ່ງລົງໄປຍັງລາຊະສຳນັກຂອງກະສັດຢູດາ ແລະກ່າວຖ້ອຍຄຳເຫລົ່ານີ້ບ່ອນນັ້ນ.[2]ວ່າ,
‘ຂ້າແດ່ກະສັດແຫ່ງຢູດາ ຜູ້ປະທັບເທິງພະທີ່ນັ່ງຂອງດາວິດ ຈົ່ງຟັງພຣະທັມຂອງພຣະຢາເວ ທັງຕົວທ່ານ, ຂ້າລາຊະການຂອງທ່ານ,
ແລະປະຊາຊົນຂອງທ່ານຜູ້ເຂົ້າມາໃນປະຕູເມືອງນີ້.[3]ພຣະຢາເວຊົງກ່າວດັ່ງນີ້ວ່າ, “ຈົ່ງເຮັດຄວາມຍຸດຕິທຳ ແລະຄວາມຊອບທຳ,
ແລະຈົ່ງຊ່ວຍຜູ້ທີ່ຖືກປຸ້ນໃຫ້ພົ້ນມືຂອງຜູ້ທີ່ກົດຂີ່ຂົ່ມເຫງ, ຢ່າໄດ້ເຮັດຄວາມຜິດ ຫລືຄວາມທາລຸນແກ່ຊົນຕ່າງດ້າວ, ລູກກຳພ້າພໍ່,
ແລະແມ່ຫມ້າຍ ຫລືຫລັ່ງເລືອດທີ່ຂາດຄວາມຜິດໃນສະຖານທີ່ນີ້.

[4]ເພາະວ່າຖ້າທ່ານເຊື່ອຟັງຖ້ອຍຄຳເຫລົ່ານີ້ຢ່າງແທ້ຈິງ, ແລ້ວຈະມີກະສັດຜູ້ປະທັບເທິງພະທີ່ນັ່ງຂອງດາວິດເຂົ້າມາທາງປະຕູຂອງພະລາຊະວັງນີ້
ສະເດັດມາໂດຍລົດຮົບ ແລະມ້າທັງຫລາຍ ທັງຕົວກະສັດ, ບັນດາຂ້າລາຊະການ, ແລະປະຊາຊົນຂອງທ່ານນັ້ນ!
[5]ແຕ່ຖ້າທ່ານບໍ່ຟັງຖ້ອຍຄຳເຫລົ່ານີ້ຈາກເຮົາ ທີ່ໄດ້ປະກາດແລ້ວ—ນີ້ເປັນຄຳປະກາດຂອງພຣະຢາເວ ເຮົາປະຕິຍານໃນນາມຂອງເຮົາເອງວ່າ—
ລາຊະສຳນັກນີ້ຈະເປັນທີ່ຮົກຮ້າງເສຍ.”
[6]ເພາະພຣະຢາເວກ່າວດັ່ງນີ້ແກ່ລາຊະສຳນັກແຫ່ງກະສັດຂອງຢູດາວ່າ, “ພວກເຈົ້າເປັນເຫມືອນກິເລອາດແກ່ເຮົາ,
ຫລືເປັນດັ່ງຍອດພູເຂົາເລບານອນ. ເຖິງປານນັ້ນ ເຮົາຈະເຮັດພວກເຈົ້າໃຫ້ເປັນຖິ່ນແຫ້ງແລ້ງກັນດານແນ່ນອນ, ເປັນເມືອງທີ່ບໍ່ມີຄົນອາໄສຢູ່ໄດ້.
[7]ເພາະເຮົາຈະຕຽມຜູ້ທຳລາຍໄວ້ຕໍ່ສູ້ພວກເຈົ້າ! ພວກເຂົາຕ່າງກໍມີອາວຸດຂອງຕົນ ຈະຕັດຕົ້ນແປກຢ່າງດີຂອງພວກເຈົ້າລົງ ແລະໂຍນເຂົ້າໃນໄຟ.
[8]ແລ້ວປະຊາຊາດເປັນຈຳນວນຫລາຍຈະຜ່ານເມືອງນີ້ໄປ. ແຕ່ລະຄົນຈະເວົ້າກັບເພື່ອນບ້ານຂອງຕົນວ່າ,
“ເປັນຫຍັງພຣະຢາເວຈຶ່ງຊົງກະທຳເຊັ່ນນີ້ແກ່ເມືອງໃຫຍ່ນີ້?”[9]ແລ້ວພວກເຂົາທັງຫລາຍຈະຕອບວ່າ,
“ເພາະເຂົາໄດ້ປະຖິ້ມຄຳຫມັ້ນສັນຍາຂອງພຣະຢາເວພຣະເຈົ້າຂອງເຂົາ ແລະນະມັດສະການຂາບໄຫວ້ພະອື່ນ ແລະ
ໄດ້ບົວລະບັດບັນດາພະເຫລົ່ານັ້ນ.”
[10]ຢ່າຮ້ອງໄຫ້ອາໄລແກ່ຜູ້ທີ່ຕາຍໄປ ຫລືຢ່າເສົ້າໂສກໃຈຍ້ອນພວກເຂົາເລີຍ; ແຕ່ຈົ່ງຮ້ອງໄຫ້ຮ່ຳໄຮອາໄລເພື່ອຜູ້ທີ່ກຳລັງຈະຈາກໄປ,
ເພາະພວກເຂົາຈະບໍ່ໄດ້ກັບມາເຫັນບ້ານເກີດເມືອງນອນຂອງຕົນອີກ.’
[11]ເພາະພຣະຢາເວກ່າວດັ່ງນີ້ແຫລະກ່ຽວກັບຊານລູມ ລູກຊາຍໂຢສີຢາ ກະສັດແຫ່ງຢູດາ, ຜູ້ຊຶ່ງຄອງລາດແທນໂຢສີຢາບິດາຂອງພຣະອົງ,
'ເພິ່ນຈາກສະຖານທີ່ນີ້ ແລະຈະບໍ່ໄດ້ກັບມາບ່ອນນີ້ອີກ.[12]ເພິ່ນຈະສິ້ນຊີວິດໃນບ່ອນທີ່ເຂົາພວກເຈົ້າຈັບເພິ່ນໄປເປັນຊະເລີຍ,
ແລະເພິ່ນຈະບໍ່ເຫັນແຜ່ນດິນນີ້ອີກເລີຍ.'
[13]ວິບັດແກ່ຜູ້ສ້າງວັງຂອງຕົນດ້ວຍຄວາມອະທຳ, ສ້າງຫ້ອງຊັ້ນເທິງໄວ້ດ້ວຍຄວາມອະຍຸດຕິທຳ, ຜູ້ທີ່ເຮັດໃຫ້ເພື່ອນບ້ານຂອງຕົນບົວລະບັດຕົນ
ໂດຍບໍ່ໄດ້ຫຍັງເລີຍ, ແລະບໍ່ໄດ້ຈ່າຍຄ່າຈ້າງໃຫ້ແກ່ເຂົາ.[14]ຜູ້ກ່າວວ່າ, ‘ເຮົາຈະສ້າງວັງໃຫຍ່ຢູ່ເອງ ພ້ອມດ້ວຍບັນດາຫ້ອງຊັ້ນເທິງກວ້າງຂວາງ.’
ແລະເຈາະປ່ອງຢ້ຽມບານໃຫຍ່ທັງຫລາຍໃຫ້ຫ້ອງນັ້ນ, ແລະແອ້ມຝາດ້ວຍໄມ້ແປກ, ແລະທາດ້ວຍສີແດງເຂັ້ມ.’
[15]ນີ້ເປັນສິ່ງທີ່ເຮັດໃຫ້ເຈົ້າເປັນກະສັດທີ່ດີ ທີ່ເຈົ້າໄດ້ຕ້ອງການຜະນັງເປັນໄມ້ແປກກັນບໍ? ພໍ່ຂອງເຈົ້າບໍ່ໄດ້ກິນ ແລະດື່ມດ້ວຍ
ແຕ່ຍັງເຮັດຄວາມຍຸດຕິທຳ ແລະຄວາມທ່ຽງທຳບໍ່ແມ່ນຫລື? ແລ້ວຄວາມຢູ່ເຢັນເປັນສຸກກໍເກີດຂຶ້ນກັບຊີວິດຂອງພວກເຂົາ.
[16]ເພິ່ນພິພາກສາຄະດີເຂົ້າຂ້າງຄົນຈົນ ແລະ ຄົນຂັດສົນ. ເປັນການດີ ທີ່ເຮັດຢ່າງນີ້ກໍເປັນການຮູ້ຈັກເຮົາບໍ່ແມ່ນຫລື?—
ນີ້ເປັນຄຳປະກາດຂອງພຣະຢາເວ.
[17]ແຕ່ບໍ່ຫຍັງໃນດວງຕາທັງສອງຂອງເຈົ້າ ແລະ ໃຈເລີຍ ນອກຈາກຄວາມກັງວົນກຳໄລຈາກການໂລບຂອງເຈົ້າ
ແລະສຳລັບການຫລັ່ງເລືອດທີ່ຂາດຄວາມຜິດໃຫ້ເຖິງຕາຍ, ເພື່ອປະຕິບັດການບີບບັງຄັບ ແລະຄວາມທາລຸນແກ່ຄົນອື່ນໆ.”[18]ເພາະສະນັ້ນ
ພຣະຢາເວຈຶ່ງກ່າວດັ່ງນີ້ກ່ຽວກັບເຢໂຮຢາກີມ ລູກຂອງໂຢສີຢາ ກະສັດແຫ່ງຢູດາ ວ່າ, “ພວກເຂົາທັງຫລາຍຈະບໍ່ໂອດຄວນອາໄລວ່າ
‘ອະນິດຈັງອ້າຍເອີຍ!’ ຫລື ‘ອະນິດຈັງເອື້ອຍເອີຍ!’ ພວກເຂົາຈະບໍ່ຄວນຄາງອາໄລວ່າ ‘ອະນິດຈັງນາຍເອີຍ!’ ຫລື
‘ອະນິດຈັງກະສັດເອີຍ!’[19]ເພິ່ນຈະຖືກຝັງໄວ້ເຫມືອນຝັງລໍ, ຄືຖືກລາກໄປໂຍນຖິ້ມໄວ້ຂ້າງນອກປະຕູເມືອງເຢຣູຊາເລັມ.
[20]ຈົ່ງຂຶ້ນໄປທີ່ພູເຂົາທັງຫລາຍເລບານອນ ແລະຮ້ອງວ່າຈົ່ງເປັ່ງສຽງຂອງພວກເຈົ້າໃນເມືອງບາຊານ. ຈົ່ງຮ້ອງຈາກພູເຂົາທັງຫລາຍຂອງ ບາຣິມ,
ເພາະວ່າຄົນຮັກທັງຫມົດຂອງພວກເຈົ້າ ຖືກທຳລາຍເສຍແລ້ວ.[21]ເຮົາໄດ້ເວົ້າກັບພວກເຈົ້າເມື່ອພວກເຈົ້າຢູ່ຢ່າງປອດໄພ, ແຕ່ພວກເຈົ້າກ່າວວ່າ,
‘ເຮົາຈະບໍ່ຟັງ.’ ນີ້ເປັນວິທີການຂອງພວກເຈົ້າຕັ້ງແຕ່ຍັງຫນຸ່ມ, ຄືພວກເຈົ້າບໍ່ເຊື່ອຟັງສຽງຂອງເຮົາເລີຍ.
[22]ລົມຈະທຳລາຍຜູ້ລ້ຽງແກະທັງຫມົດຂອງພວກເຈົ້າ, ແລະບັນດາຄົນຮັກຂອງພວກເຈົ້າຈະໄປເປັນຊະເລີຍ.
ແລ້ວພວກເຈົ້າຈະອັບອາຍຂາຍຫນ້າຢ່າງແນ່ນອນ ເນື່ອງດ້ວຍຄວາມຊົ່ວທັງຫມົດຂອງພວກເຈົ້າ.[23]ຊາວເມືອງ ‘ເລບານອນເອີຍ’
ຜູ້ໄດ້ສ້າງຮັງຢູ່ທ່າມກາງໄມ້ແປກ, ພວກເຈົ້າຈະໄດ້ຮັບຄວາມກະລຸນາຈັກເທົ່າໃດ,
ເມື່ອຄວາມເຈັບປວດມາເຫນືອພວກເຈົ້າເຫມືອນຄວາມເຈັບປວດຂອງຍິງທີ່ເກີດລູກ!”
[24]“ເຮົາມີຊີວິດຢູ່ສັນໃດ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຖິງວ່າເຢໂຮຢາຊິນ ລູກຂອງເຢໂຮຢາກີມ, ກະສັດແຫ່ງຢູດາ,
ໄດ້ເປັນແຫວນປະທັບຢູ່ທີ່ມືຂວາຂອງເຮົາ, ເຮົາຈະຖອດເຈົ້າອອກເສຍ.[25]ເພາະເຮົາໄດ້ມອບພວກເຈົ້າໄວ້ໃນມືຂອງຄົນເຫລົ່ານັ້ນ
ທີ່ສະແຫວງຫາຊີວິດຂອງພວກເຈົ້າ ແລະໃນມືຂອງຄົນເຫລົ່ານັ້ນ ຊຶ່ງພວກເຈົ້າຢ້ານ ຄືໃນຫນ້າຂອງເນບູກາດເນັດຊາ ກະສັດແຫ່ງບາບີໂລນ
ແລະ ໃນມືຂອງຄົນເຄນເຄຍ.[26]ເຮົາຈະໂຍນພວກເຈົ້າ ແລະແມ່ຜູ້ເກີດພວກເຈົ້າໄປຍັງອີກປະເທດຫນຶ່ງ, ຊຶ່ງພວກເຈົ້າບໍ່ໄດ້ເກີດບ່ອນນັ້ນ,
ແຕ່ພວກເຈົ້າຈະຕາຍບ່ອນນັ້ນ.
[27]ກ່ຽວກັບແຜ່ນດິນແຫ່ງນີ້ ທີ່ເຂົາຕ້ອງຢາກຈະກັບນັ້ນ, ພວກເຂົາຈະບໍ່ໄດ້ກັບມາທີ່ນີ້.[28]ນີ້ເປັນພາຊະນະທີ່ຖືກຫມິ່ນປະຫມາດ ແລະແຕກ
ຫລືເປັນພາຊະນະທີ່ບໍ່ມີໃຜມັກບໍ? ເປັນຫຍັງຕົວລາວ ແລະເຊື້ອສາຍຂອງລາວຈຶ່ງຖືກໂຍນອອກມາ, ແລະຖືກໂຍນເຂົ້າໃນແຜ່ນດິນ
ຊຶ່ງພວກເຂົາທັງຫລາຍບໍ່ຮູ້ຈັກ?
[29]ໂອແຜ່ນດິນ, ແຜ່ນດິນ, ແຜ່ນດິນເອີຍ! ຈົ່ງຟັງພຣະທັມຂອງພຣະຢາເວ.[30]ພຣະຢາເວຊົງກ່າວດັ່ງນີ້ວ່າ, ‘ຈົ່ງຂຽນລົງກ່ຽວກັບຊາຍຄົນນີ້
ເຢໂຮຢາກີມວ່າ: ເພິ່ນຈະບໍ່ມີລູກ. ເປັນຊາຍຊຶ່ງບໍ່ຈະເລີນໃນຊົ່ວຊີວິດຂອງລາວ, ຫລືບໍ່ມີຄົນແຫ່ງເຊື້ອສາຍຂອງລາວຈັກຄົນຫນຶ່ງ
ທີ່ຈະປະສົບຜົນສຳເລັດ ຫລືໄດ້ປະທັບເທິງພະທີ່ນັ່ງຂອງດາວິດ ແລະປົກຄອງໃນຢູດາອີກ.’”

 generated on Tue Jun 17 19:01:42 2025

23 [1]“ວິບັດແກ່ບັນດາຜູ້ລ້ຽງແກະ ຜູ້ທຳລາຍ ແລະເຮັດໃຫ້ແກະແຫ່ງທົ່ງຫຍ້າຂອງເຮົາແຕກກະຈັດກະຈາຍໄປ—
ນີ້ເປັນຄຳປະກາດຂອງພຣະຢາເວ.”[2]ເພາະສະນັ້ນພຣະຢາເວ, ພຣະເຈົ້າຂອງຊາດອິດສະຣາເອນ, ຊຶ່ງກ່າວເຖິງພວກຜູ້ປົກຄອງ
ຄືຜູ້ລ້ຽງດູໄພ່ພົນຂອງພຣະອົງວ່າ, “ພວກເຈົ້າທັງຫລາຍໄດ້ເຮັດໃຫ້ໄພ່ພົນຂອງເຮົາແຕກກະຈັດກະຈາຍໄປ ແລະ
ໄດ້ຂັບໄລ່ໃຫ້ພວກເຂົາຫນີໄປເສຍ. ພວກເຈົ້າບໍ່ໄດ້ລ້ຽງດູເອົາໃຈໃສ່ພວກເຂົາ. ດັ່ງນັ້ນເຮົາຈະລົງໂທດພວກເຈົ້າ ຍ້ອນການຊົ່ວທີ່ເຈົ້າໄດ້ກະທຳ—
ນີ້ເປັນຄຳປະກາດຂອງພຣະຢາເວ.

[3]ເຮົາຈະເຕົ້າໂຮມເອົາຝູງແກະຂອງເຮົາທີ່ຍັງເຫລືອຢູ່ອອກມາຈາກດິນແດນທັງປວງທີ່ເຮົາໄດ້ຂັບໄລ່ພວກເຂົາໄປ,
ແລະເຮົາຈະນຳພວກເຂົາກັບຄືນມາທົ່ງຫຍ້າ, ທີ່ພວກເຂົາຈະມີລູກຫລານເພີ່ມທະວີຂຶ້ນຢ່າງຫລວງຫລາຍ.[4]ແລ້ວເຮົາຈະໃຫ້ມີຜູ້ປົກຄອງ
ຜູ້ຊຶ່ງຈະເບິ່ງແຍງພວກເຂົາ ດັ່ງນັ້ນພວກເຂົາຈະບໍ່ຢ້ານ ຫລືຕື່ນວຸ້ນວາຍອີກຕໍ່ໄປ. ຈະບໍ່ມີໃຜຈັກຄົນສູນຫາຍໄປຈາກເຮົາເລີຍ—
ນີ້ເປັນຄຳປະກາດຂອງພຣະຢາເວ.”
[5]ເບິ່ງແມ, ວັນເວລາເຫລົ່ານັ້ນກຳລັງມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເມື່ອເຮົາຈະເລືອກເອົາຄົນຫນຶ່ງຈາກເຊື້ອສາຍຂອງດາວິດມາເປັນກະສັດຜູ້ຊອບທຳ. ເພິ່ນຜູ້ນີ້ຈະປົກຄອງຢ່າງກະສັດ; ສະຫລາດຫລັກແຫລມ
ແລະຈະເຮັດແຕ່ສິ່ງທີ່ຊອບທຳ ແລະຍຸດຕິທຳຕໍ່ປະຊາຊົນທົ່ວແຜ່ນດິນ.[6]ໃນລະຫວ່າງກະສັດອົງນີ້ປົກຄອງຢູ່ນັ້ນ ຢູດາຈະໄດ້ຮັບການຊ່ວຍກູ້, ແລະ
ອິດສະຣາເອນຈະອາໄສຢູ່ຢ່າງປອດໄພ. ແລ້ວພວກເຂົາຈະເອີ້ນຊື່ກະສັດອົງນີ້ວ່າ: ພຣະຢາເວຊົງເປັນຄວາມຊອບທຳຂອງເຮົາ.
[7]ເພາະສະນັ້ນ, ເບິ່ງແມ, ວັນເຫລົ່ານັ້ນກຳລັງມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອນັ້ນຄົນທັງຫລາຍຈະບໍ່ກ່າວອີກຕໍ່ໄປວ່າ,
‘ພຣະຢາເວຊົງມີຊີວິດຢູ່ສັນໃດ ຜູ້ຊົງນຳພາປະຊາຊົນອິດສະຣາເອນອອກຈາກປະເທດເອຢິບ.’[8]ແຕ່ພວກເຂົາຈະກ່າວວ່າ,
‘ພຣະຢາເວຊົງມີຊີວິດຢູ່ສັນໃດ ຜູ້ຊົງນຳ ແລະພາເຊື້ອສາຍອິດສະຣາເອນອອກຈາກປະເທດຝ່າຍເຫນືອ ແລະອອກຈາກປະເທດທັງປວງ
ທີ່ເຮົາໄດ້ໃຫ້ພວກເຂົາກະຈັດກະຈາຍໄປຢູ່ນັ້ນ.’ ແລ້ວພວກເຂົາຈະຢູ່ໃນປະເທດຂອງຕົນເອງ.”
[9]ກ່ຽວກັບເລື່ອງບັນດາຜູ້ປະກາດພຣະທັມມີຄື, ໃຈຂອງຂ້ານ້ອຍເປັນທຸກຢູ່ພາຍໃນຂ້ານ້ອຍ, ແລະກະດູກທັງຫມົດຂອງຂ້ານ້ອຍກໍສັ່ນ,
ຂ້ານ້ອຍເປັນເຫມືອນຄົນເມົາ, ຂ້ານ້ອຍເປັນເຫມືອນຄົນເມົາດ້ວຍເຫລົ້າອະງຸ່ນ, ເນື່ອງດ້ວຍພຣະຢາເວ ແລະ
ເນື່ອງດ້ວຍພຣະທັມແຫ່ງຄວາມບໍລິສຸດຂອງພຣະອົງ.[10]ເພາະວ່າແຜ່ນດິນນັ້ນເຕັມໄປດ້ວຍຄົນລ່ວງປະເວນີ ດ້ວຍເຫດວ່າແຜ່ນດິນນີ້ແຫ້ງແລ້ງ.
ເດີນຫຍ້າໃນຖິ່ນແຫ້ງແລ້ງກັນດານກໍແຫ້ງໄປ. ການດຳເນີນຊີວິດຂອງພວກເຂົາທັງຫລາຍກໍຊົ່ວຊ້າ ແລະອຳນາດຂອງພວກເຂົາກໍບໍ່ເປັນທຳ.
[11]“ເພາະທັງຜູ້ປະກາດພຣະທັມ ແລະພວກປະໂລຫິດກໍອະທຳ. ເຮົາກໍໄດ້ເຫັນຄວາມຊົ່ວຂອງພວກເຂົາ ແມ່ນແຕ່ໃນພຣະວິຫານຂອງເຮົາ!—
ນີ້ເປັນຄຳປະກາດຂອງພຣະຢາເວ—[12]ເພາະສະນັ້ນ ຫົນທາງຂອງພວກເຂົາ ຈະເປັນເຫມືອນທາງມື່ນໃນຄວາມມືດແກ່ເຂົາ,
ເຂົາທັງຫລາຍຈະຖືກຂັບໄລ່ລົງໄປ. ພວກເຂົາຈະລົ້ມລົງໃນນັ້ນ.
ເພາະເຮົາຈະນຳເຫດຮ້າຍມາເຫນືອພວກເຂົາໃນປີແຫ່ງການລົງໂທດຂອງພວກເຂົາ—ນີ້ເປັນຄຳປະກາດຂອງພຣະຢາເວ.
[13]ເພາະເຮົາໄດ້ເຫັນຄວາມໂງ່ຈ້າ ໃນບັນດາຜູ້ປະກາດພຣະທັມໃນຊາມາເຣຍ: ພວກເຂົາໄດ້ປະກາດພຣະທັມໃນນາມຂອງພະບາອານ ແລະ
ໄດ້ນຳໃຫ້ອິດສະຣາເອນ ປະຊາຊົນຂອງເຮົາຫລົງໄປ.[14]ໃນທ່າມກາງບັນດາຜູ້ປະກາດພຣະທັມໃນນະຄອນເຢຣູຊາເລັມ
ເຮົາໄດ້ເຫັນສິ່ງອັນຫນ້າຕື່ນຕົກໃຈ: ພວກເຂົາລ່ວງປະເວນີ ແລະດຳເນີນຢູ່ໃນຄວາມຂີ້ຕົວະ. ພວກເຂົາໃຫ້ກຳລັງແກ່ຜູ້ເຮັດຄວາມຊົ່ວ;
ບໍ່ມີຜູ້ຫນຶ່ງຜູ້ໃດຫັນຈາກຄວາມຊົ່ວຂອງຕົນ. ພວກເຂົາທຸກຄົນກາຍເປັນເຫມືອນເມືອງໂຊໂດມແກ່ເຮົາ ແລະ
ຊາວເມືອງນັ້ນກໍເຫມືອນເມືອງໂກໂມຣາ!”[15]ເພາະສະນັ້ນພຣະຢາເວຈອມໂຍທາຈຶ່ງກ່າວກ່ຽວກັບເລື່ອງຜູ້ປະກາດພຣະທັມເຫລົ່ານັ້ນວ່າ,
“ເບິ່ງແມ, ເຮົາຈະລ້ຽງພວກເຂົາດ້ວຍເຄືອເຂົາຮໍ ແລະໃຫ້ດື່ມນ້ຳມີພິດ, ເພາະວ່າຄວາມອະທຳໄດ້ແຜ່ອອກໄປທົ່ວແຜ່ນດິນນີ້
ຈາກບັນດາຜູ້ປະກາດພຣະທັມແຫ່ງນະຄອນເຢຣູຊາເລັມ.”
[16]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, “ຢ່າຟັງບັນດາຖ້ອຍຄຳຂອງຜູ້ປະກາດພຣະທັມ ພວກເຂົາເຮັດໃຫ້ທ່ານບໍ່ມີສາລະ.
ພວກເຂົາກ່າວເຖິງນິມິດແຫ່ງໃຈຂອງຕົນເອງ ບໍ່ແມ່ນຈາກປາກຂອງພຣະຢາເວ.[17]ພວກເຂົາຍັງເວົ້າກັບຄົນທີ່ຫມິ່ນປະຫມາດເຮົາໂດຍທັນທີວ່າ,
‘ພຣະຢາເວຊົງປະກາດວ່າ ຈະສັນຕິສຸກສຳລັບເຈົ້າ’ ເພາະທຸກຄົນທີ່ດຳເນີນຕາມຄວາມດື້ດ້ານແຫ່ງຈິດໃຈຂອງຕົນເອງ ກ່າວວ່າ,
‘ຈະບໍ່ມີເຫດຮ້າຍມາເຫນືອພວກເຈົ້າ.’[18]ເພາະວ່າຜູ້ໃດບໍ່ທີ່ໄດ້ຢືນຢູ່ໃນຄຳຕັກເຕືອນຂອງພຣະຢາເວ? ຜູ້ໃດຈະພິຈາລະນາເຫັນ
ແລະໄດ້ຍິນພຣະທັມຂອງພຣະອົງ? ຫລືຜູ້ໃດທີ່ໃສ່ໃຈ ແລະ ເຊື່ອຟັງພຣະທັມຂອງພຣະອົງ?
[19]ເບິ່ງແມ, ຈະມີລົມບ້າຫມູກຳລັງມາຈາກພຣະຢາເວ! ດ້ວຍວ່າຄວາມໂກດຮ້າຍຂອງພຣະອົງກຳລັງອອກໄປແລ້ວ, ແລະພະຍຸກຳລັງຫມູນຢູ່.
ມັນຈະຫມຸນວົນເທິງຫົວທັງຫລາຍຂອງຄົນອະທຳ.[20]ຄວາມໂກດຮ້າຍຂອງພຣະຢາເວຈະບໍ່ຖອຍຫລັງກັບ ຈົນກວ່າມັນຈະສຳເລັດ
ແລະໄດ້ຊົງກະທຳຕາມພຣະເຈດຕະນາແຫ່ງພຣະໄທຂອງພຣະອົງ. ໃນວັນສຸດທ້າຍ, ພວກເຈົ້າທັງຫລາຍຈະເຂົ້າໃຈເລື່ອງນີ້.
[21]ເຮົາບໍ່ໄດ້ໃຊ້ຜູ້ປະກາດພຣະທັມເຫລົ່ານີ້ໄປ. ພວກເຂົາໄດ້ອອກມາເອງ. ເຮົາບໍ່ໄດ້ເວົ້າກັບພວກເຂົາ ແຕ່ພວກເຂົາຍັງເປັນຜູ້ປະກາດພຣະທັມ.
[22]ເພາະຖ້າພວກເຂົາໄດ້ຢືນຢູ່ໃນຄຳຕັກເຕືອນຂອງເຮົາ, ພວກເຂົາຈະໄດ້ເວົ້າເຖິງຖ້ອຍຄຳຂອງເຮົາຕໍ່ປະຊາຊົນຂອງເຮົາ;
ພວກເຂົາຄົງຈະໄດ້ໃຫ້ປະຊາຊົນຖອຍຫລັງກັບຈາກທາງຊົ່ວຂອງພວກເຂົາ
ແລະຖອຍຫລັງກັບຈາກການກະຄວາມທຳຊົ່ວຮ້າຍຂອງພວກເຂົາແລ້ວ.
[23]ເຮົາເປັນພຽງພຣະເຈົ້າຜູ້ສະຖິດຢູ່ໃກ້—ນີ້ເປັນຄຳປະກາດຂອງພຣະຢາເວ —
ແລະບໍ່ແມ່ນພຣະເຈົ້າທີ່ຢູ່ໄກດ້ວຍບໍ?”[24]ຄົນໃດຈະເຊື່ອງຕົນຢູ່ໃນທີ່ລີ້ລັບເພື່ອເຮົາຈະບໍ່ໄດ້ເຫັນລາວໄດ້ບໍ? —ນີ້ເປັນຄຳປະກາດຂອງພຣະຢາເວ—
ແລະເຮົາບໍ່ໄດ້ຢູ່ເຕັມທ້ອງຟ້າ ແລະໂລກນີ້ບໍ? —ນີ້ເປັນຄຳປະກາດຂອງພຣະຢາເວ.
[25]ເຮົາໄດ້ຍິນຜູ້ປະກາດພຣະທັມໄດ້ກ່າວແລ້ວ, ຄົນເຫລົ່ານັ້ນຜູ້ຊຶ່ງປະກາດພຣະທັມເລື່ອງບໍ່ຈິງໃນນາມຂອງເຮົາ. ພວກເຂົາໄດ້ກ່າວ,
‘ຂ້ານ້ອຍໄດ້ມີຄວາມຝັນ! ຂ້ານ້ອຍໄດ້ມີຄວາມຝັນ!’[26]ຈະເປັນແບບນີ້ອີກດົນເທົ່າໃດ, ທີ່ຜູ້ປະກາດພຣະທັມຊຶ່ງປະກາດພຣະທັມ
ເລື່ອງບໍ່ຈິງຂອງພວກເຂົາ ແລະປະກາດພຣະທັມຕາມການຫລອກລວງແຫ່ງຈິດໃຈຂອງພວກເຂົາ?
[27]ພວກເຂົາກຳລັງວາງແຜນທີ່ຈະເຮັດໃຫ້ປະຊາຊົນຂອງເຮົາລືມຊື່ຂອງເຮົາ ໂດຍຄວາມຝັນຂອງພວກເຂົາ ຊຶ່ງບອກສູ່ກັນ,
ແຕ່ລະຄົນກັບເພື່ອບ້ານຂອງເຂົາ, ເຫມືອນກັບເຫລົ່າບັນພະບູລຸດຂອງພວກເຂົາທີ່ລືມຊື່ຂອງເຮົາ ໄປຊື່ນຊົມຊື່ພະບາອານ.

 generated on Tue Jun 17 19:01:42 2025

[28]ຜູ້ປະກາດພຣະທັມທີ່ໄດ້ຝັນໃຫ້ເຂົາເລົ່າຄວາມຝັນ. ແຕ່ໃຫ້ຄົນທີ່ມີຖ້ອຍຄຳຂອງເຮົາໄດ້ປະກາດບາງຢ່າງ, ໃຫ້ເຂົາປະກາດຖ້ອຍຂອງເຮົາ
ຢ່າງສັດຊື່. ເພາະເຟືອງເຂົ້າມີຫຍັງແດ່ທີ່ເຫມືອນຮວງເຂົ້າ?—ນີ້ເປັນຄຳປະກາດຂອງພຣະຢາເວ—[29]ຖ້ອຍຄຳຂອງເຮົາບໍ່ເຫມືອນໄຟບໍ?—
ນີ້ເປັນຄຳປະກາດຂອງພຣະຢາເວ—ແລະເຫມືອນຄ້ອນທີ່ຕີຫີນໃຫ້ແຕກເປັນຝຸ່ນບໍ່ແມ່ນຫລື?[30]ເພາະສະນັ້ນ ເບິ່ງແມ,
ເຮົາຕໍ່ສູ້ກັບບັນດາຜູ້ປະກາດພຣະທັມ—ນີ້ເປັນຄຳປະກາດຂອງພຣະຢາເວ—ຜູ້ລັກຖ້ອຍຄຳຂອງເຮົາຈາກຄົນອື່ນ
ແລະກ່າວວ່າຖ້ອຍຄຳເຫລົ່ານີ້ມາຈາກເຮົາ.
[31]ເບິ່ງແມ, ເຮົາຕໍ່ສູ້ກັບບັນດາຜູ້ປະກາດພຣະທັມ—ນີ້ເປັນຄຳປະກາດຂອງພຣະຢາເວ— ຜູ້ໃຊ້ລີ້ນຂອງຕົນປະກາດພຣະທັມທັງຫລາຍ.[32]ເບິ່ງແມ,
ເຮົາຕໍ່ສູ້ຄົນເຫລົ່ານັ້ນທີ່ປະກາດພຣະທັມອັນເປັນຄວາມຝັນບໍ່ຈິງ—ນີ້ເປັນຄຳປະກາດຂອງພຣະຢາເວ—
ແລະຜູ້ຊຶ່ງບອກແລະນຳປະຊາຊົນຂອງເຮົາໃຫ້ຫລົງໄປໂດຍຄຳຂີ້ຕົວະ ແລະ ຄຳໂອ້ອວດຂອງຕົນ. ເຮົາຕໍ່ສູ້ພວກເຂົາ,
ເພາະເຮົາບໍ່ໄດ້ໃຊ້ເຂົາຫລືສັ່ງເຂົາໄປ ຫລື ບໍ່ໄດ້ສັ່ງພວກເຂົາ. ດັ່ງນັ້ນພງກເຂົາຈຶ່ງບໍ່ເປັນປະໂຫຍດແກ່ຊົນຊາດນີ້ຢ່າງໃດເລີຍ—
ນີ້ເປັນຄຳປະກາດຂອງພຣະຢາເວ.
[33]ເມື່ອປະຊາຊົນເຫລົ່ານີ້, ຫລືຜູ້ປະກາດພຣະທັມຄົນໃດ, ຫລືປະໂລຫິດຄົນໃດ ຖາມພວກເຈົ້າວ່າ, ‘ແມ່ນຫຍັງຄືພາລະຂອງພຣະຢາເວ?’
ເຈົ້າຈຶ່ງຕອບລາວວ່າ, ‘ພວກເຈົ້ານັ້ນແຫລະເປັນພາລະຂອງເຮົາ ແລະເຮົາຈະໂຍນພວກເຈົ້າໄປເສຍ’—ນີ້ເປັນຄຳປະກາດຂອງພຣະຢາເວ.
[34]ສ່ວນຜູ້ປະກາດພຣະທັມ, ກັບພວກປະໂລຫິດ, ຫລືປະຊາຊົນຜູ້ຫນຶ່ງຜູ້ໃດຊຶ່ງເວົ້າວ່າ, ‘ນີ້ຄືພາລະຂອງພຣະຢາເວ’ ເຮົາຈະລົງໂທດຜູ້ນັ້ນ
ແລະຄອບຄົວຂອງລາວ.
[35]ພວກເຈົ້າຈຶ່ງເວົ້າດັ່ງນີ້ ແຕ່ລະຄົນເວົ້າກັບເພື່ອນບ້ານຂອງຕົນ, ‘ພຣະຢາເວຕອບວ່າອັນໃດ?’ ແລະ
‘ພຣະຢາເວຊົງປະກາດວ່າອັນໃດ?’[36]ແຕ່ພວກເຈົ້າຢ່າກ່າວວ່າ, ‘ພາລະຂອງພຣະຢາເວ’ ເພາະວ່າພາລະນັ້ນເປັນຄຳຂອງທຸກຄົນ
ແລະພວກເຈົ້າໄດ້ບິດເບືອນພຣະທັມຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ຄືພຣະຢາເວຈອມໂຍທາ, ພຣະເຈົ້າຂອງພວກເຮົາ.
[37]ນີ້ຄືສິ່ງທີ່ເຈົ້າຈະກ່າວກັບຜູ້ປະກາດພຣະທັມດັ່ງນີ້ວ່າ, ‘ພຣະຢາເວຊົງຕອບທ່ານວ່າແນວໃດ?’ ຫລື
‘ພຣະຢາເວໄດ້ຊົງກ່າວອັນໃດ?’[38]ແຕ່ຖ້າພວກເຈົ້າເວົ້າວ່າ, ‘ພາລະຂອງພຣະຢາເວ,’ ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ:
‘ເພາະພວກເຈົ້າທັງຫລາຍໄດ້ກ່າວຄຳເຫລົ່ານີ້ວ່າ, ‘ພາລະຂອງພຣະຢາເວ,’ ເມື່ອເຮົາໃຊ້ໄປຫາເຈົ້າວ່າ, ເຈົ້າຢ່າເວົ້າວ່າ,
‘ພາລະຂອງພຣະຢາເວ.’”[39]ເພາະສະນັ້ນ ເບິ່ງແມ, ເຮົາຈະຍົກພວກເຈົ້າທັງຫລາຍຂຶ້ນ ແລະໂຍນພວກເຈົ້າໄປຈາກຫນ້າເຮົາ, ທັງພວກເຈົ້າ
ພ້ອມກັບເມືອງຊຶ່ງເຮົາໄດ້ໃຫ້ແກ່ພວກເຈົ້າ ແລະແກ່ບັນພະບູລຸດຂອງພວກເຈົ້າ.[40]ແລ້ວເຮົາຈະນຳຄວາມຄວາມອັບອາຍ
ແລະການຖືກຕຳຫນິເປັນນິດ ມາເຫນືອພວກເຈົ້າທັງຫລາຍ ຊຶ່ງຈະລືມບໍ່ໄດ້ເລີຍ.’”

 generated on Tue Jun 17 19:01:42 2025

# 24

[1]ພຣະຢາເວກໍຊົງສະແດງນິມິດແກ່ຂ້ານ້ອຍດັ່ງນີ້. ເບິ່ງແມ, ມີກະຕ່າສອງຫນ່ວຍໃສ່ຫມາກເດື່ອເທດ ວາງໄວ້ຫນ້າພຣະວິຫານຂອງພຣະຢາເວ
(ນິມິດນີ້ໄດ້ສະແດງແກ່ຂ້ານ້ອຍ ຫລັງຈາກເນບູກາດເນັດຊາກະສັດແຫ່ງບາບີໂລນ ໄດ້ຈັບເຢໂຮຢາກີນ ລູກຂອງເຢໂຮຢາກີມ,
ກະສັດແຫ່ງຢູດາໄປເປັນຊະເລີຍ, ພ້ອມກັບພວກເຈົ້ານາຍແຫ່ງຢູດາ, ທັງພວກຊ່າງໄມ້ ແລະຊ່າງເຫລັກ ຈາກນະຄອນເຢຣູຊາເລັມ
ແລະນຳພວກເຂົາມາຍັງນະຄອນ ບາບີໂລນ.)[2]ກະຕ່າຫນ່ວຍຫນຶ່ງມີຫມາກເດື່ອເທດຢ່າງດີເຫມືອນກັບຫມາກເດື່ອເທດທີ່ສຸກຕົ້ນລະດູ
ແຕ່ກະຕ່າອີກຫນ່ວຍຫນຶ່ງນັ້ນມີຫມາກເດື່ອເທດທີ່ຂີ້ຮ້າຍ ເຫມົ່າຈົນພວກເຂົາກິນບໍ່ໄດ້.[3]ພຣະຢາເວຊົງກ່າວແກ່ຂ້ານ້ອຍວ່າ “ເຢເຣມີຢາເອີຍ,
ເຈົ້າເຫັນຫຍັງ?” ຂ້ານ້ອຍຕອບວ່າ “ເຫັນຫມາກເດື່ອເທດທີ່ດີຫລາຍ ແລະ ທີ່ບໍ່ດີກໍຫລາຍເຫມົ່າຈົນພວກເຂົາກິນບໍ່ໄດ້.”

[4]ແລ້ວພຣະທັມຂອງພຣະຢາເວກໍມາເຖິງຂ້ານ້ອຍ, ກ່າວວ່າ,[5]“ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ:
ເຮົາຈະຖືວ່າພວກເຫລົ່ານັ້ນທີ່ຖືກກວາດໄປຊະເລີຍຂອງຢູດາເປັນຜົນປະໂຫຍດຂອງພວກເຂົາຢູ່,
ເຫມືອນກັບຫມາກເດື່ອເທດທີ່ດີເຫລົ່ານີ້ແຫລະ, ຄືຜູ້ທີ່ເຮົາໄດ້ສົ່ງໄປຈາກສະຖານທີ່ນີ້ໄປສູ່ແຜ່ນດິນຂອງຊາວເຄນເດຍ.
[6]ເຮົາຈະຕັ້ງຕາຂອງເຮົາເບິ່ງພວກເຂົາ ເພື່ອຈະເຮັດຄວາມດີ ແລະເຮົາຈະພາພວກເຂົາທັງຫລາຍກັບມາຍັງແຜ່ນດິນນີ້ອີກ.
ເຮົາຈະສ້າງພວກເຂົາຂຶ້ນ, ແລະຈະບໍ່ຮື້ພວກເຂົາລົງ. ເຮົາຈະປູກຝັງພວກເຂົາ ແລະບໍ່ຖອນພວກເຂົາເສຍ.
[7]ແລ້ວເຮົາຈະໃຫ້ຈິດໃຈແກ່ຜູ້ທີ່ຈະຮູ້ຈັກເຮົາວ່າ, ເຮົາຄືພຣະຢາເວ. ພວກເຂົາຈະເປັນປະຊາຊົນຂອງເຮົາ
ແລະເຮົາຈະເປັນພຣະເຈົ້າຂອງພວກເຂົາ, ເພາະພວກເຂົາຈະກັບມາຫາເຮົາດ້ວຍຄວາມເຕັມໃຈ.
[8]ແຕ່ເຫມືອນດັ່ງຫມາກເດື່ອເທດທີ່ຂີ້ຮ້າຍ ທີ່ເຫມົ່າຫລາຍຈົນກິນບໍ່ໄດ້ນັ້ນ—ນີ້ຄືສິ່ງທີ່ພຣະຢາເວກ່າວ—ເຮົາຈະເຮັດຕໍ່
ເຊເດກີຢາກະສັດແຫ່ງຢູດາ, ທັງພວກເຈົ້ານາຍຂອງເພິ່ນ, ແລະຊາວເຢຣູຊາເລັມທີ່ເຫລືອຢູ່ ຜູ້ຊຶ່ງຍັງຄ້າງຢູ່ໃນແຜ່ນດິນນີ້
ຫລືທີ່ຍັງອາໄສຢູ່ໃນປະເທດເອຢິບ.[9]ເຮົາຈະເຮັດໃຫ້ພວກເຂົາກາຍເປັນສິ່ງທີ່ຫນ້າຢ້ານກົວ, ເປັນໄພພິບັດ,
ໃນສາຍຕາຣາຊະອານາຈັກທັງຫມົດໃນໂລກ, ແລະເພື່ອຄວາມທຸກຍາກ ໃຫ້ເປັນທີ່ຖືກຕຳຫນິ, ເປັນຂີ້ປາກ, ເປັນຄຳເຍາະເຍີ້ຍ,
ແລະເປັນຄຳສາບແຊ່ງ ທົ່ວໄປທຸກແຫ່ງຊຶ່ງເຮົາຂັບໄລ່ພວກເຂົາໃຫ້ໄປຢູ່ນັ້ນ.[10]ເຮົາຈະສົ່ງດາບອອກໄປ, ແລະການອຶດຢາກອາຫານ, ແລະ
ພະຍາດລະບາດມາທ່າມກາງພວກເຂົາ, ຈົນພວກເຂົາຈະຖືກທຳລາຍຢ່າງສິ້ນເຊີງຈາກແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່ພວກເຂົາ,
ແລະແກ່ບັນພະບູລຸດຂອງພວກເຂົາ.”


generated on Tue Jun 17 19:01:42 2025

25 [1]ນີ້ຄືພຣະທັມຊຶ່ງມາເຖິງເຢເຣມີຢາກ່ຽວກັບເລື່ອງຊົນຊາດຢູດາທັງຫມົດ. ເມື່ອເຖິງປີທີສີ່ແຫ່ງລາຊະການເຢໂຮຢາກິມ,
ລູກຊາຍຂອງໂຢສີຢາ, ກະສັດແຫ່ງຢູດາ. ປີນັ້ນເປັນຕົ້ນປີລາຊະການຂອງ ເນບູກາດເນັດຊາ, ກະສັດຂອງກຸງບາບີໂລນ.
[2]ເຢເຣມີຢາຜູ້ປະກາດພຣະທັມໄດ້ກ່າວແກ່ປະຊາຊົນຢູດາ ແລະແກ່ຊາວເຢຣູຊາເລັມທັງຫມົດ.

[3]ເພິ່ນໄດ້ກ່າວວ່າ, "ເປັນເວລາຊາວສາມປີ, ຕັ້ງແຕ່ປີທີສິບສາມຂອງໂຢສີຢາ, ລູກຊາຍຂອງອາໂມນ, ກະສັດແຫ່ງຢູດາ, ຈົນເຖິງວັນນີ້
ພຣະທັມຂອງພຣະຢາເວມາຍັງຂ້ານ້ອຍ ແລະຂ້ານ້ອຍກໍໄດ້ບອກແກ່ທ່ານທັງຫລາຍຢ່າງບໍ່ຢຸດຢັ້ງ, ແຕ່ທ່ານກໍບໍ່ໄດ້ຍອມຟັງ.
[4]ພຣະຢາເວຊົງສົ່ງບັນດາຜູ້ປະກາດພຣະທັມ ຜູ້ຮັບໃຊ້ຂອງພຣະອົງມາຢ່າງບໍ່ຂາດສາຍກໍຕາມ, ແຕ່ພວກທ່ານບໍ່ຟັງ ຫລື ໃຫ້ຄວາມສົນໃຈເລີຍ.
[5]ພວກຜູ້ປະກາດພຣະທັມເຫລົ່ານີ້ໄດ້ກ່າວວ່າ, 'ຈົ່ງໃຫ້ແຕ່ລະຄົນຖອຍຫລັງກັບຈາກທາງຊົ່ວຂອງຕົນ ແລະຈາກການເຮັດຜິດຂອງຕົນ
ແລະກັບໄປອາໄສຢູ່ໃນແຜ່ນດິນຊຶ່ງພຣະຢາເວຊົງປະທານແກ່ພວກເຈົ້າ ແລະບັນພະບູລຸດ, ຕັ້ງແຕ່ບູຮານເປັນຂອງຂວັນເປັນນິດ.
[6]ດັ່ງນັ້ນຢ່າໄປຕິດຕາມພະອື່ນໆ ເພື່ອຈະບົວລະບັດ, ແລະນະມັດສະການພະເຫລົ່ານັ້ນ ຫລືຍົວະເຍົ້າພຣະອົງໃຫ້ຮ້າຍ
ດ້ວຍຜົນງານແຫ່ງມືຂອງພວກເຈົ້າ ແລ້ວພຣະອົງຈະບໍ່ເຮັດອັນຕະລາຍແກ່ພວກເຈົ້າ.'
[7]ເຖິງຢ່າງນັ້ນພວກເຈົ້າທັງຫລາຍກໍບໍ່ຟັງເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—
ດັ່ງນັ້ນພວກເຈົ້າຈະໄດ້ຍົວະເຍົ້າເຮົາໃຫ້ໂກດຮ້າຍດ້ວຍຜົນງານແຫ່ງມືຂອງພວກເຈົ້າ ຊຶ່ງເປັນຜົນຮ້າຍແກ່ພວກເຈົ້າເອງ.[8]ເພາະສະນັ້ນ
ພຣະຢາເວຈອມໂຍທາຈຶ່ງຊົງກ່າວດັ່ງນີ້ວ່າ, 'ເພາະພວກເຈົ້າບໍ່ຟັງຖ້ອຍຄຳຂອງເຮົາ,'[9]ເບິ່ງແມ, ເຮົາຈະເອີ້ນຄອບຄົວທັງຫມົດຂອງທາງທິດເຫນືອ
—ນີ້ເປັນຄຳປະກາດຂອງພຣະຢາເວ—ພ້ອມດ້ວຍເນບູກາດເນັດຊາ, ກະສັດບາບີໂລນ, ຜູ້ຮັບໃຊ້ຂອງເຮົາ
ແລະເຮົາຈະນຳພວກເຂົາມາຕໍ່ສູ້ແຜ່ນດິນນີ້ ຊາວເມືອງນີ້, ແລະບັນດາປະຊາຊາດທີ່ຢູ່ອ້ອມຮອບພວກເຈົ້າ.
ເພາະເຮົາຈະທຳລາຍພວກເຂົາໃຫ້ຫມົດສິ້ນ. ເຮົາຈະເຮັດໃຫ້ພວກເຂົາເປັນທີ່ຫນ້າຢ້ານກົວ, ແລະ ເປັນທີ່ເຍາະເຍີ້ຍ
ແລະເປັນທີ່ຮົກຮ້າງເປັນນິດ.
[10]ເຮົາຈະກຳຈັດສຽງແຫ່ງຄວາມຊື່ນຊົມ ແລະສຽງແຫ່ງຄວາມຍິນດີ, ສຽງພວກເຈົ້າບ່າວ ແລະສຽງພວກເຈົ້າສາວ, ສຽງຫີນໂມ້
ແລະແສງຕະກຽງຈາກພວກເຈົ້າ.[11]ແຜ່ນດິນທັງຫມົດນີ້ຈະເປັນທີ່ຮ້າງເປົ່າ ແລະ ທີ່ຫນ້າປະຫລາດໃຈ,
ແລະບັນດາປະຊາຊາດເຫລົ່ານີ້ຈະບົວລະບັດແຫ່ງກະສັດກຸງບາບີໂລນຢູ່ເຈັດສິບປີ.'
[12]ແລ້ວສິ່ງນີ້ຈະເກີດຂຶ້ນເມື່ອຄົບເຈັດສິບປີແລ້ວ, ເຮົາຈະລົງໂທດກະສັດບາບີໂລນ ແລະປະຊາຊົນຊາດນັ້ນ, ຄືແຜ່ນດິນຂອງຊາວເຄນເດຍ—
ນີ້ເປັນຄຳປະກາດຂອງພຣະຢາເວ—ເພາະຄວາມຊົ່ວຊ້າຂອງພວກເຂົາ ເຮັດໃຫ້ແຜ່ນດິນນັ້ນຖືກຮ້າງຢູ່ເປັນນິດ.
[13]ແລ້ວເຮົາຈະຕໍ່ສູ້ແຜ່ນດິນນັ້ນທີ່ຖືກຖ້ອຍຄຳທັງຫມົດທີ່ເຮົາໄດ້ກ່າວ, ແລະທຸກສິ່ງທີ່ຂຽນໄວ້ໃນຫນັງສືນີ້
ຊຶ່ງເຢເຣມີຢາໄດ້ທຳນາຍແກ່ບັນດາປະຊາຊາດ ແລະບັນດາກະສັດທັງຫມົດໃຫ້ສຳເລັດທີ່ແຜ່ນດິນນັ້ນ.[14]ເພາະວ່າຈະມີຫລາຍປະຊາຊາດ
ແລະບັນດາມະຫາກະສັດເຮັດໃຫ້ພວກເຂົາເຫລົ່ານັ້ນເປັນຂ້າທາດເຫມືອນກັນ. ເຮົາຈະຕອບແທນພວກເຂົາທັງຫລາຍຕາມການກະທຳ
ແລະຜົນງານແຫ່ງມືຂອງພວກເຂົາ.'"
[15]ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ ໄດ້ກ່າວກັບຂ້ານ້ອຍດັ່ງນີ້ວ່າ, "ຈົ່ງເອົາຈອກເຫລົ້າອະງຸ່ນແຫ່ງຄວາມໂກດຮ້າຍນີ້ໄປຈາກມືເຮົາ
ແລະບັງຄັບບັນດາປະຊາຊາດ ຊຶ່ງເຮົາກຳລັງສົ່ງພວກເຈົ້າໄປນັ້ນໃຫ້ດື່ມຈາກຈອກນັ້ນ.[16]ເພາະພວກເຂົາຈະດື່ມ ແລະຍ່າງໂຊເຊ
ທັງບ້າຄັ່ງໄປເນື່ອງດ້ວຍດາບຊຶ່ງເຮົາຈະສົ່ງໄປທ່າມກາງພວກເຂົາ."
[17]ດັ່ງນັ້ນ ຂ້ານ້ອຍຈຶ່ງຮັບຈອກມາຈາກພຣະຫັດຂອງພຣະຢາເວ, ແລະບັງຄັບປະຊາຊາດທັງຫມົດ
ຊຶ່ງພຣະຢາເວຊົງໃຊ້ໃຫ້ຂ້ານ້ອຍໄປຫານັ້ນດື່ມ.[18]ນະຄອນເຢຣູຊາເລັມ ແລະຫົວເມືອງຕ່າງໆຂອງຢູດາ ທັງບັນດາກະສັດ
ແລະພວກເຈົ້ານາຍຂອງເມືອງນັ້ນ ເຮັດໃຫ້ເປັນທີ່ຮົກຮ້າງ ແລະທີ່ຫນ້າຕົກໃຈຢ້ານ ແລະເປັນທີ່ເຍາະເຍີ້ຍ
ແລະເປັນທີ່ສາບແຊ່ງທີ່ພວກເຂົາເປັນທຸກມື້ນີ້.
[19]ຊົນຊາດອື່ນໆກໍຕ້ອງດື່ມມັນເຫມືອນກັນ: ຟາຣາໂອກະສັດແຫ່ງເອຢິບກັບ ແລະບັນດາຂ້າລາຊະການພວກເຈົ້ານາຍ;
ແລະປະຊາຊົນທັງຫມົດຂອງເພຣະອົງນັ້ນ;[20]ແລະບັນດາຊົນຕ່າງດ້າວທີ່ມີວັດທະນະທຳປະສົມປະສານ; ກັບບັນດາກະສັດແຫ່ງແຜ່ນດິນອູເຊ
ແລະ ບັນດາກະສັດແຫ່ງແຜ່ນດິນຟີລິດສະຕິນ—ຄືເມືອງອາຊະກາໂລນ, ຄາຊາ, ເອັກໂຣນ, ແລະສ່ວນຊາວເມືອງທີ່ເຫລືອຢູ່ ອາຊະໂດດ;
[21]ເອໂດມ ແລະໂມອາບ ແລະຄົນອຳໂມນ.
[22]ບັນດາກະສັດແຫ່ງເມືອງຕີເຣ, ບັນດາກະສັດເມືອງຊີໂດນ, ແລະບັນດາກະສັດແຫ່ງເກາະຕ່າງຟາກທະເລເບື້ອງນັ້ນ,[23]ເມືອງເດດານ, ເຕມາ,
ບູເຊ ພ້ອມດ້ວຍບັນດາຄົນທີ່ໂກນຫົວຈອນຫູ ພວກເຂົາຕ້ອງດື່ມເຫມືອນກັນ.
[24]ປະຊາຊົນເຫລົ່ານີ້ກໍຕ້ອງດື່ມເຫມືອນກັນຄື: ບັນດາກະສັດແຫ່ງອາຫລັບ ແລະ
ບັນດາກະສັດແຫ່ງປະຊາຊົນທີ່ປະປົນກັນຢູ່ໃນຖິ່ນແຫ້ງແລ້ງກັນດານ;[25]ບັນດາກະສັດແຫ່ງຊິມຣີ, ແລະບັນດາກະສັດແຫ່ງເອລາມ,
ແລະບັນດາກະສັດຂອງເມເດຍ;[26]ບັນດາກະສັດແຫ່ງເມືອງທາງທິດເຫນືອ, ພວກທີ່ຢູ່ໃກ້ແລະພວກທີ່ຢູ່ໄກ—ທຸກໆຄົນ ພ້ອມກັບພີ່ນ້ອງ
ແລະບັນດາຣາຊະອານາຈັກແຫ່ງໂລກຊຶ່ງຢູ່ເທິງພື້ນໂລກ. ແລະທ້າຍທີ່ສຸດກະສັດແຫ່ງບາບີໂລນ ຈະດື່ມພາຍຫລັງກະສັດເຫລົ່ານີ້.
[27]ພຣະຢາເວໄດ້ກ່າວກັບຂ້ານ້ອຍວ່າ, "ບັດນີ້ ເຈົ້າຈົ່ງເວົ້າກັບພວກເຂົາທັງຫລາຍວ່າ, 'ພຣະຢາເວຈອມໂຍທາ ພຣະເຈົ້າແຫ່ງອິດສະຣາເອນ,
ກ່າວດັ່ງນີ້ວ່າ: ຈົ່ງດື່ມ ແລະໃຫ້ເມົາແລ້ວຮາກອອກ, ຈົ່ງລົ້ມລົງ, ແລະຢ່າລຸກຂຶ້ນອີກເລີຍ
ເນື່ອງດ້ວຍດາບຊຶ່ງເຮົາຈະສົ່ງມາທ່າມກາງພວກເຈົ້າທັງຫລາຍ.'[28]ແລ້ວສິ່ງນີ້ຈະເກີດຂຶ້ນ ຖ້າພວກເຂົາປະຕິເສດບໍ່ຮັບຈອກຈາກມືຂອງເຈົ້າດື່ມ,
ເຈົ້າຈົ່ງເວົ້າກັບພວກເຂົາວ່າ, 'ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ພວກເຈົ້າຈະຕ້ອງດື່ມ.[29]ເພາະເບິ່ງແມ,
ເຮົາໄດ້ເລີ່ມລົງໂທດເມືອງຊຶ່ງເອີ້ນຕາມນາມຂອງເຮົາແລ້ວ ແລະພວກເຈົ້າຈະຫລົບຫນີໄປໄດ້ໂດຍບໍ່ຖືກໂທດບໍ? ພວກເຈົ້າຈະລອຍນວນໄປບໍ່ໄດ້
ເພາະເຮົາຈະເອີ້ນດາບເຫລັ້ມຫນຶ່ງມາເຫນືອບັນດາຜູ້ອາໄສຢູ່ໃນແຜ່ນດິນໂລກທັງຫມົດ!—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.'
[30]ເຈົ້າຈົ່ງປະກາດພຣະຄຳເຫລົ່ານີ້ທັງຫມົດສູ່ພວກເຂົາ ແລະກ່າວແກ່ເຂົາວ່າ, 'ພຣະຢາເວຈະຊົງເປັ່ງສຽງແຜດຮ້ອງຈາກທີ່ສູງ
ແລະຈາກທີ່ປະທັບອັນບໍລິສຸດຂອງພຣະອົງ, ແລະພຣະອົງຈະເປັ່ງພຣະສຸລະສຽງແຜດຮ້ອງຕໍ່ຄອກແກະຂອງພຣະອົງ
ແລະຊົງໂຫ່ຮ້ອງເຫມືອນກັບຄົນທີ່ຢຽບອະງຸ່ນໂຫ່ຮ້ອງຕໍ່ຊາວໂລກທັງຫມົດ.[31]ສຽງແຫ່ງການຕໍ່ສູ້

 generated on Tue Jun 17 19:01:42 2025

ຈະກ້ອງກັງວານໄປຈົນເຖິງທີ່ສຸດປາຍແຜ່ນດິນໂລກ, ເພາະພຣະຢາເວຊົງມີຄະດີກັບບັນດາປະຊາຊາດທັງຫລາຍ,
ພຣະອົງຈະຊົງເຂົ້າພິພາກສາເນື້ອຫນັງທັງຫມົດສ່ວນຄົນຊົ່ວນັ້ນ. ພຣະອົງຈະຊົງຟັນເສຍດ້ວຍດາບ—ນີ້ເປັນຄຳປະກາດຂອງພຣະຢາເວ.’
[32]ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ, ‘ເບິ່ງແມ, ຄວາມຮ້າຍກຳລັງຈະອອກໄປຈາກປະຊາຊາດນີ້ເຖິງປະຊາຊາດນັ້ນ
ແລະລົມພາຍຸໃຫຍ່ຈະປັ້ນປ່ວນຂຶ້ນມາ ຈາກສ່ວນໂລກທີ່ໄກທີ່ສຸດ.
[33]ແລ້ວບັນດາຜູ້ທີ່ພຣະຢາເວໄດ້ຊົງປະຫານໃນມື້ນັ້ນຈະມາຈາກປາຍໂລກເບື້ອງນີ້ເຖິງປາຍໂລກເບື້ອງນັ້ນ;
ພວກເຂົາເຫລົ່ານັ້ນຈະບໍ່ມີໃຜຄວນຄາງໃຫ້, ຫລືຮວບຮວມ, ຫລືຝັງໄວ້. ພວກເຂົາຈະເປັນເຫມືອນຂີ້ສັດຢູ່ເທິງພື້ນດິນ.
[34]ຜູ້ລ້ຽງແກະທັງຫລາຍເອີຍ, ຈົ່ງຮ້ອງຄາງ ແລະ ຮ້ອງຂໍຄວາມຊ່ວຍເຫລືອເຖີດ! ພວກເຈົ້າຂອງຝູງແກະເອີຍ, ຈົ່ງກິ້ງເກືອກໃນຂີ້ເຖົ່າ,
ເພາະວັນເວລາຂອງການສັງຫານພວກເຈົ້າ ແລະທີ່ພວກເຈົ້າຕ້ອງກະຈັດກະຈາຍມາເຖິງແລ້ວ;
ພວກເຈົ້າທັງຫລາຍຈະລົ້ມລົງເຫມືອນຢ່າງເຄື່ອງປັ້ນທີ່ລ້ຳຄ່າ.[35]ຈະບໍ່ມີບ່ອນລີ້ໄພໃຫ້ຜູ້ລ້ຽງແກະ, ຈະບໍ່ມີທາງຫນີລອດສຳລັບພວກຜູ້ນຳຝູງແກະ.
[36]ຈົ່ງຟັງບັນດາສຽງຮ້ອງຂອງຜູ້ລ້ຽງແກະ ແລະສຽງຮ້ອງຄາງຂອງພວກເຈົ້າຂອງພວກຜູ້ນຳຝູງແກະທັງຫລາຍ,
ເພາະວ່າພຣະຢາເວຊົງທຳລາຍເດີ່ນຫຍ້າຂອງພວກເຂົາເສຍແລ້ວ.
[37]ດັ່ງນັ້ນທົ່ງຫຍ້າທີ່ສະຫງົບສຸກກໍຖືກເຮັດໃຫ້ລົ້ມລົງເສຍແລ້ວ ເນື່ອງດ້ວຍຄວາມໂກດຮ້າຍອັນແຮງກ້າຂອງພຣະຢາເວ.[38]ເຫມືອນໂຕສິງຫນຸ່ມ
ທີ່ອອກຈາກບ່ອນຊຸ້ມຂອງມັນ, ເພາະວ່າແຜ່ນດິນຂອງພວກເຂົາທັງຫລາຍເປັນທີ່ຫນ້າຕົກໃຈ ຢ້ານກົວ
ເນື່ອງດ້ວຍຄວາມໂກດຮ້າຍຂອງຜູ້ບີບບັງຄັບ, ເນື່ອງດ້ວຍຄວາມໂກດຮ້າຍອັນແຮງກ້າຂອງພຣະອົງ.’”

 generated on Tue Jun 17 19:01:42 2025

26 [1]ໃນຕົ້ນລາຊະການຂອງເຢໂຮຢາກີມພະລາຊະໂອລົດຂອງໂຢສີຢາ ໄດ້ເປັນກະສັດຢູດາ, ໄດ້ມີພຣະທັມຂອງພຣະຢາເວ, ກ່າວວ່າ,
[2]“ພຣະຢາເວໄດ້ຊົງກ່າວດັ່ງນີ້ວ່າ: ຈົ່ງຢືນຂຶ້ນໃນເດີ່ນພຣະວິຫານຂອງເຮົາ ແລະຈົ່ງປະກາດກ່ຽວກັບເມືອງທັງຫມົດແຫ່ງຢູດາ
ຜູ້ຊຶ່ງນະມັດສະການໃນພຣະວິຫານຂອງເຮົາ. ຈົ່ງປະກາດທຸກຖ້ອຍຄໍາທີ່ເຮົາໄດ້ສັ່ງເຈົ້າໄວ້ໃຫ້ເວົ້າກັບພວກເຂົາ, ຢ່າໄດ້ເວັ້ນຈັກຄໍາດຽວ!
[3]ບາງທີພວກເຂົາອາດຈະເຊື່ອຟັງ, ທີ່ແຕ່ລະຄົນຈະຫັນກັບເສຍຈາກທາງຊົ່ວຂອງຕົນກໍໄດ້, ດັ່ງນັ້ນ
ເຮົາກໍຈະປ່ຽນຄວາມຕັ້ງໃຈບໍ່ນໍາໄພພິບັດມາເຫນືອພວກເຂົາ ຍ້ອນການຊົ່ວທີ່ພວກເຂົາໄດ້ເຮັດ.”

[4]ດັ່ງນັ້ນ ເຈົ້າຈົ່ງເວົ້າຕໍ່ປະຊາຊົນວ່າ, ‘ພຣະຢາເວໄດ້ຊົງກ່າວວ່າ: ຖ້າພວກເຈົ້າບໍ່ເຊື່ອຟັງເຮົາ
ໂດຍເຮັດຕາມພຣະທັມຄໍາສອນທີ່ເຮົາໄດ້ວາງໄວ້ຕໍ່ຫນ້າພວກເຈົ້າ—[5]ຖ້າພວກເຈົ້າບໍ່ເອົາໃຈໃສ່ເຮັດຕາມຖ້ອຍຄໍາຂອງຜູ້ຮັບໃຊ້ເຮົາ
ຄືພວກຜູ້ປະກາດພຣະທັມ ຊຶ່ງເຮົາໃຊ້ມາຫາພວກເຈົ້ານັ້ນ ພວກເຈົ້າຢ່າງບໍ່ເຄີຍຂາດ— ແຕ່ພວກເຈົ້າບໍ່ເຄີຍຟັງຄວາມພວກເຂົາເລີຍນັ້ນ! —
[6]ແລ້ວເຮົາຈະເຮັດໃຫ້ພຣະວິຫານນີ້ເປັນເຫມືອນເມືອງຊີໂລ;
ເຮົາຈະເຮັດເມືອງນີ້ເປັນຄໍາສາບແຊ່ງໃນສາຍຕາຊົນຊາດທັງປວງທົ່ວແຜ່ນດິນໂລກ.’”
[7]ພວກປະໂລຫິດ, ພວກຜູ້ປະກາດພຣະທັມ, ແລະປະຊາຊົນທັງປວງໄດ້ຍິນເຢເຣມີຢາປະກາດຖ້ອຍຄໍາເຫລົ່ານີ້ໃນພຣະວິຫານຂອງພຣະຢາເວ.
[8]ດັ່ງນັ້ນ ສິ່ງນີ້ໄດ້ເກີດຂຶ້ນ ເມື່ອເຢເຣມີຢາໄດ້ຈົບຄໍາປະກາດທັງສິ້ນ ຊຶ່ງພຣະຢາເວຊົງບັນຊາທ່ານໃຫ້ເວົ້າແກ່ ພວກປະໂລຫິດ,
ພວກຜູ້ປະກາດພຣະທັມ, ແລະປະຊາຊົນທັງຫມົດ ກໍໄດ້ຈັບກຸມເອົາເຢເຣມີຢາ ພ້ອມທັງຮ້ອງໃສ່ວ່າ, “ເຈົ້າຈະຕ້ອງຕາຍຢ່າງແນະນອນ.
[9]ເປັນຫຍັງເຈົ້າຈຶ່ງປະກາດພຣະຄໍາໃນພຣະນາມຂອງພຣະຢາເວວ່າ ແລະກໍໄດ້ກ່າວວ່າ ພຣະວິຫານນີ້ຈະເປັນເຫມືອນເມືອງຊີໂລ ແລະ
ວ່າເມືອງນີ້ຈະຖືກທໍາລາຍ, ຈະບໍ່ມີຄົນອາໄສຢູ່?” ເພາະປະຊາຊົນທັງຫມົດກໍໄດ້ຈັດກຸ່ມປະທ້ວງຕໍ່ ເຢເຣມີຢາໃນພຣະວິຫານຂອງພຣະຢາເວ.
[10]ແລ້ວພວກເຈົ້ານາຍຂອງຊາວຢູດາໄດ້ຍິນຖ້ອຍຄໍາເຫລົ່ານີ້ ແລະ ກໍໄດ້ກັບຂຶ້ນມາຈາກພະລາຊະສໍານັກ ໄປເຖິງພຣະວິຫານຂອງພຣະຢາເວ.
ພວກເຂົາໄດ້ມານັ່ງຢູ່ໃນທາງເຂົ້າປະຕູໃຫມ່ ຂອງພຣະວິຫານຂອງພຣະຢາເວນັ້ນ.[11]ພວກປະໂລຫິດ
ແລະພວກຜູ້ປະກາດພຣະທັມໄດ້ເວົ້າຕໍ່ພວກເຈົ້ານາຍ ແລະປະຊາຊົນທັງຫມົດ. ພວກເຂົາກ່າວວ່າ, “ເປັນການສົມຄວນແລ້ວ
ທີ່ຜູ້ຊາຍຄົນນີ້ຈະໄດ້ຮັບໂທດເຖິງຕາຍ, ເພາະວ່າລາວໄດ້ເວົ້າໃສ່ຮ້າຍເມືອງນີ້, ດັ່ງທີ່ພວກທ່ານໄດ້ຍິນກັບຫູຕົນເອງແລ້ວ!”[12]ດັ່ງນັ້ນ
ເຢເຣມີຢາໄດ້ເວົ້າກັບພວກເຈົ້ານາຍ ແລະປະຊາຊົນທັງຫມົດວ່າ, “ພຣະຢາເວຊົງໃຊ້ຂ້ານ້ອຍມາກ່າວຄໍາທໍານວຍຕໍ່ສູ້ພຣະວິຫານ ແລະເມືອງນີ້,
ຄືກ່າວບັນດາຖ້ອຍຄໍາທີ່ພວກທ່ານໄດ້ຍິນແລ້ວນັ້ນ.
[13]ເພາະສະນັ້ນບັດນີ້, ຈົ່ງແກ້ໄຂວິທີທາງ ແລະການປະພຶດທັງຫລາຍຂອງພວກທ່ານ, ແລະຈົ່ງເຊື່ອຟັງຖ້ອຍຄໍາແຫ່ງພຣະຢາເວຂອງທ່ານ
ເພື່ອພຣະອົງຈະຊົງປ່ຽນພຣະໄທບໍ່ນໍາເອົາໄພພິບັດທີ່ພຣະອົງຊົງກ່າວນັ້ນມາໃສ່ພວກທ່ານ.[14]ສໍາລັບຂ້ານ້ອຍ— ຈົ່ງເບິ່ງຂ້ານ້ອຍ! —
ຢູ່ໃນເງື້ອມມືຂອງພວກທ່ານແລ້ວ. ຈົ່ງເຮັດກັບຂ້ານ້ອຍຕາມທີ່ເຫັນດີໃນສາຍຕາຂອງພວກທ່ານເຖີດ.[15]ຂໍແຕ່ພຽງໃຫ້ທ່ານຮູ້ແນ່ວ່າ
ຖ້າວ່າທ່ານຈະຂ້າ ຂ້ານ້ອຍ, ແລ້ວທ່ານກໍາລັງຈະນໍາເລືອດທີ່ບໍ່ມີຄວາມຜິດມາຕົກເຫນືອຕົວພວກທ່ານເອງ ແລະແກ່ເມືອງນີ້
ແລະພວກຜູ້ທີ່ອາໄສຢູ່ໃນເມືອງນີ້, ເພາະວ່າແມ່ນພຣະຢາເວໄດ້ຊົງໃຊ້ຂ້ານ້ອຍມາບອກຖ້ອຍຄໍາທັງຫມົດນີ້ ໃຫ້ເຂົ້າຫູຂອງພວກທ່ານ.”
[16]ແລ້ວພວກເຈົ້ານາຍ ແລະປະຊາຊົນທັງຫມົດໄດ້ເວົ້າຕໍ່ພວກປະໂລຫິດ ແລະ ພວກຜູ້ປະກາດພຣະທັມວ່າ,
“ເປັນການບໍ່ສົມຄວນຈະລົງໂທດຊາຍຜູ້ນີ້ເຖິງຕາຍ,
ເພາະວ່າລາວປະກາດເລື່ອງທັງຫລາຍກັບພວກເຮົາໃນພຣະນາມຂອງພຣະຢາເວພຣະເຈົ້າຂອງພວກເຮົາ.”[17]ຈາກນັ້ນ
ມີຜູ້ອາວຸໂສບາງຄົນໄດ້ຢືນຂຶ້ນ ແລະເວົ້າກັບປະຊາຊົນທີ່ຊຸມນຸມກັນ.
[18]ພວກເຂົາໄດ້ເວົ້າວ່າ, “ມີກາ ຜູ້ປະກາດພຣະທັມຊາວໂມເຣເຊັດ ໄດ້ກໍາລັງປະກາດພຣະທັມໃນສະໄຫມເຮເຊກີຢາ ເປັນກະສັດຢູດານັ້ນ.
ເພິ່ນໄດ້ກ່າວແກ່ປະຊາຊົນທັງສິ້ນຂອງຢູດາ ແລະກ່າວວ່າ, ‘ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ເມືອງຊີໂອນຈະຖືກໄຖເຫມືອນດັ່ງໄຖນາ,
ນະຄອນເຢຣູຊາເລັມຈະກາຍເປັນກອງສິ່ງຫັກພັງ, ແລະເທິງພູທີ່ຕັ້ງພຣະວິຫານຈະກາຍເປັນປ່າຮົກໄປດ້ວຍພຸ່ມໄມ້.’[19]ເຮເຊກີຢາ ກະສັດຢູດາ
ແລະຊາວຢູດາທັງຫມົດກໍໄດ້ຂ້າມີກາເສຍແລ້ວຫລື? ພວກເຂົາບໍ່ໄດ້ຢໍາເກງພຣະຢາເວ ແລະບໍ່ໄດ້ອ້ອນວອນຂໍພຣະຢາເວ
ແລ້ວພຣະຢາເວໄດ້ຊົງປ່ຽນພຣະໄທບໍ່ນໍາໄພພິບັດມາສູ່ພວກເຂົາຫລື?
ດັ່ງນັ້ນພວກເຮົາກໍາລັງຈະນໍາໄພພິບັດອັນຫນ້າຢ້ານມາສູ່ຊີວິດຂອງພວກເຮົາເອງຫລື?”
[20]ຂະນະດຽວກັນມີຊາຍອີກຄົນຫນຶ່ງ ຜູ້ໄດ້ປະກາດພຣະທັມໃນພຣະນາມຂອງພຣະຢາເວ, ຊື່ວ່າ— ອູຣີຢາ
ເປັນລູກຊາຍຂອງເຊມາຢາຊາວເມືອງກີຣີຢາດເຢອາຣີມ— ລາວໄດ້ປະກາດພຣະຄໍາກ່າວໂທດຕໍ່ສູ້ເມືອງນີ້,
ແລະແຜ່ນດິນນີ້ເຫມືອນກັບຖ້ອຍຄໍາຂອງເຢເຣມີຢາ.[21]ແຕ່ເມື່ອກະສັດເຢໂຮຢາກີມ ກັບພວກນາຍທະຫານຂອງພຣະອົງ
ແລະພວກເຈົ້ານາຍໄດ້ຍິນອູຣີຢາເວົ້າແລ້ວ, ກະສັດກໍຊອກຫາຊ່ອງທາງຈະຂ້າອູຣີຢາເສຍ, ແຕ່ເມື່ອອູຣີຢາໄດ້ຮູ້ເລື່ອງນີ້ ແລະລາວກໍຢ້ານ,
ຈຶ່ງປົບຫນີໄປຍັງປະເທດເອຢິບ.
[22]ແລ້ວກະສັດເຢໂຮຢາກີມຈຶ່ງສົ່ງເອນນາທານລູກຊາຍຂອງອັກໂບ ກັບຄົນອື່ນອີກບາງຄົນໄປຈັບເອົາອູຣີຢາມາຈາກເອຢິບ.
[23]ພວກເຂົາໄດ້ນໍາອູຣີຢາມາໃຫ້ກະສັດເຢໂຮຢາກີມ ແລ້ວພຣະອົງໄດ້ຂ້າອູຣີຢາດ້ວຍດາບ
ແລະໄດ້ໂຍນສົບຂອງລາວເຂົ້າໄປໃນບ່ອນຝັງສົບຂອງປະຊາຊົນທົ່ວໄປ.”[24]ແຕ່ຍ້ອນມືຂອງອາຮີການ
ລູກຊາຍຊາຟານໄດ້ຊ່ວຍເຫລືອໄວ້ເຢເຣມີຢາ, ດັ່ງນັ້ນລາວຈຶ່ງບໍ່ໄດ້ຖືກມອບໃຫ້ປະຊາຊົນທີ່ຈະປະຫານຊີວິດເພິ່ນ.

# 27

[1]ໃນຕົ້ນລາຊະການເຢໂຮຢາກິມ ລາຊະໂອລົດຂອງໂຢສີຢາ ກະສັດແຫ່ງຢູດາ, ພຣະທັມນີ້ມາຈາກພຣະຢາເວເຖິງເຢເຣມີຢາ.
[2]ພຣະຢາເວໄດ້ຊົງກ່າວກັບຂ້ານ້ອຍດັ່ງນີ້ວ່າ, "ຈົ່ງເຮັດສາຍຮັດ ແລະແອກສຳລັບຕົວເຈົ້າ. ຈົ່ງສວມພວກມັນທີ່ຄໍຂອງພວກເຈົ້າ.
[3]ແລ້ວສົ່ງພວກມັນໄປຍັງກະສັດແຫ່ງເອໂດມ, ກະສັດແຫ່ງໂມອາບ, ແລະກະສັດແຫ່ງຄົນອຳໂມນ, ກະສັດແຫ່ງຕີເຣ ແລະ ກະສັດແຫ່ງຊີໂດນ.
ດ້ວຍມືຂອງຜູ້ສົ່ງຂ່າວທີ່ມາເຂົ້າເຝົ້າເຊເດກີຢາກະສັດແຫ່ງຢູດາ ທີ່ນະຄອນເຢຣູຊາເລັມ.[4]ຈົ່ງຝາກຄຳເຫລົ່ານີ້ແກ່ບັນດານາຍຂອງພວກເຂົາ
ແລະກ່າວວ່າ, 'ພຣະຢາເວຈອມໂຍທາ ພຣະເຈົ້າແຫ່ງອິດສະຣາເອນ ຊົງກ່າວດັ່ງນີ້ວ່າ,
ນີ້ຄືສິ່ງທີ່ພວກເຈົ້າຈະຕ້ອງກ່າວໃຫ້ບັນດານາຍຂອງພວກເຈົ້າຟັງວ່າ,

[5]"ນີ້ຄືເຮົາເອງ ຜູ້ໄດ້ສ້າງໂລກດ້ວຍລິດທານຸພາບອັນຍິ່ງໃຫຍ່ ແລະດ້ວຍແຂນທີ່ຢຽດອອກຂອງເຮົາ. ເຮົາໄດ້ສ້າງມະນຸດ ແລະສັດທັງຫລາຍ
ຊຶ່ງຢູ່ເທິງພື້ນດິນເຊັ່ນກັນ, ແລະ ເຮົາຈະໃຫ້ແກ່ຜູ້ໃດກໍໄດ້ສຸດແຕ່ເຮົາເຫັນດີ.[6]ດັ່ງນັ້ນບັດນີ້,
ເຮົາກຳລັງຈະໃຫ້ແຜ່ນດິນເຫລົ່ານີ້ທັງຫມົດໄວ້ໃນມືຂອງ ເນບູກາດເນັດຊາ, ກະສັດແຫ່ງບາບີໂລນ, ຜູ້ຮັບໃຊ້ຂອງເຮົາ. ພ້ອມທັງ,
ເຮົາກຳລັງຈະໃຫ້ສິ່ງມີຊີວິດທັງຫລາຍໃນທົ່ງແກ່ລາວເພື່ອຈະບົວລະບັດລາວ.[7]ເພາະປະຊາຊາດທັງຫມົດຈະຕ້ອງບົວລະບັດຕົວລາວ,
ລູກຊາຍທັງຫລາຍ, ແລະຫລານຊາຍທັງຫລາຍຂອງລາວ ຈົນກວ່າເວລາກຳນົດແຫ່ງແຜ່ນດິນຂອງລາວເອງຈະມາເຖິງ. ແລ້ວຫລາຍປະຊາຊາດ
ແລະ ບັນດາມະຫາກະສັດຈະເຮັດໃຫ້ລາວເປັນຂ້າທາດຂອງພວກເຂົາ.
[8]ດັ່ງນັ້ນປະຊາຊາດໃດ ແລະຣາຊະອານາຈັກໃດ ທີ່ບໍ່ບົວລະບັດເນບູກາດເນັດຊາ, ກະສັດແຫ່ງບາບີໂລນ, ແລະ
ບໍ່ຍອມວາງຄໍໄວ້ໃຕ້ແອກຂອງກະສັດບາບີໂລນ—ເຮົາຈະລົງໂທດປະຊາຊາດນັ້ນດ້ວຍດາບ, ດ້ວຍການອຶດຢາກອາຫານ,
ແລະດ້ວຍພະຍາດລະບາດ—ນີ້ເປັນຄຳປະກາດຂອງພຣະຢາເວ—ຈົນກວ່າເຮົາຈະລ້າງຜານເສຍດ້ວຍມືຂອງລາວ.
[9]ເພາະສະນັ້ນ ຢ່າບັນດາຟັງຜູ້ປະກາດພຣະທັມ, ຫລືພວກຫມໍດູຂອງເຈົ້າ, ພວກຜູ້ທຳນວຍຂອງເຈົ້າ, ຫລືຄົນຊ່າງຝັນຂອງພວກເຈົ້າ,
ຫລືນັກເວດມົນຄາຖາຂອງພວກເຈົ້າ, ຜູ້ຊຶ່ງກ່າວແກ່ພວກເຈົ້າວ່າ,
'ຢ່າບົວລະບັດກະສັດແຫ່ງນະຄອນບາບີໂລນ.'[10]ເພາະພວກເຂົາປະກາດພຣະທັມແກ່ເຈົ້າເປັນຄວາມບໍ່ຈິງ
ທີ່ເຮັດໃຫ້ເຈົ້າຕ້ອງໂຍກຍ້າຍໄກໄປຈາກແຜ່ນດິນຂອງເຈົ້າ, ເພາະເຮົາຈະຂັບໄລ່ເຈົ້າອອກໄປ, ແລະເຈົ້າຈະຕາຍ.
[11]ແຕ່ປະຊາຊາດໃດຊຶ່ງເອົາຄໍຂອງຕົນວາງໄວ້ໃຕ້ແອກຂອງກະສັດແຫ່ງບາບີໂລນ ແລະບົວລະບັດເພິ່ນ, ເຮົາຈະປະຜູ້ນັ້ນໄວ້ເທິງແຜ່ນດິນຂອງລາວ
—ນີ້ເປັນຄຳປະກາດຂອງພຣະຢາເວ—ແລະພວກເຂົາຈະເຮັດໄຮ່ໄຖນາ ແລະປຸກເຮືອນທັງຫລາຍໃນແຜ່ນດິນນັ້ນ.'""
[12]ດັ່ງນັ້ນ ຂ້ານ້ອຍໄດ້ທູນເຊເດກີຢາກະສັດແຫ່ງຢູດາ ແລະໄດ້ບອກຕາມບັນດາຖ້ອຍຄຳເຫລົ່ານີ້ຕໍ່ພຣະອົງວ່າ,
"ຈົ່ງເອົາຄໍຂອງທ່ານໄວ້ໃຕ້ແອກຂອງກະສັດແຫ່ງບາບີໂລນ ແລະບົວລະບັດລາວ ແລະປະຊາຊົນຂອງລາວ, ແລະທ່ານຈະມີຊີວິດຢູ່.
[13]ເປັນຫຍັງທ່ານຈະຕາຍ—ທ່ານກັບຊົນຊາດຂອງທ່ານ—ດ້ວຍດາບ, ດ້ວຍການອຶດຫິວອາຫານ, ແລະດ້ວຍພະຍາດລະບາດ,
ດັ່ງທີ່ພຣະຢາເວຊົງປະກາດກ່ຽວກັບປະຊາຊາດ ທີ່ປະຕິເສດ ບໍ່ບົວລະບັດກະສັດແຫ່ງບາບີໂລນ?
[14]ຢ່າຟັງຖ້ອຍຄຳຂອງຜູ້ປະກາດພຣະທັມຜູ້ກ່າວແກ່ພວກເຈົ້າວ່າ, 'ຈົ່ງຢ່າບົວລະບັດກະສັດແຫ່ງບາບີໂລນ,'
ເພາະພວກເຂົາທັງຫລາຍກຳລັງທຳນວາຍແກ່ທ່ານນັ້ນ ກໍເປັນການຂີ້ຕົວະ.[15]'ເພາະເຮົາບໍ່ໄດ້ໃຊ້ພວກເຂົາອອກໄປ—
ນີ້ເປັນຄຳປະກາດຂອງພຣະຢາເວ— ເພາະພວກເຂົາທຳນວຍຄວາມບໍ່ຈິງໃນນາມຂອງເຮົາ ດັ່ງນັ້ນເຮົາຈະຂັບໄລ່ພວກເຈົ້າອອກໄປ ແລະ
ພວກເຈົ້າຈະຕ້ອງຈິບຫາຍ, ທັງຕົວພວກເຈົ້າ ແລະ ຜູ້ປະກາດພຣະທັມທັງຫລາຍຊຶ່ງກ່າວທຳນວຍໃຫ້ແກ່ພວກເຈົ້າ.'"
[16]ຂ້ານ້ອຍກໍໄດ້ເວົ້າກັບປະໂລຫິດ ແລະປະຊາຊົນທັງຫມົດວ່າ, "ພຣະຢາເວກ່າວດັ່ງນີ້ວ່າ:
ຢ່າເຊື່ອຟັງຖ້ອຍຄຳຂອງຜູ້ປະກາດພຣະທັມຂອງພວກເຈົ້າ ຊຶ່ງທຳນວຍໃຫ້ແກ່ພວກເຈົ້າ ແລະກ່າວວ່າ, 'ເບິ່ງແມ!
ເຄື່ອງໃຊ້ຕ່າງໆຂອງພຣະວິຫານແຫ່ງພຣະຢາເວຖືກນຳກັບມາຈາກນະຄອນບາບີໂລນ ບັດນີ້!'
ພວກເຂົາກຳລັງກ່າວທຳນວຍເປັນຄວາມບໍ່ຈິງແກ່ທ່ານ.[17]ຢ່າເຊື່ອຟັງພວກເຂົາເລີຍ. ເຈົ້າຈົ່ງບົວລະບັດກະສັດແຫ່ງບາບີໂລນ ແລະມີຊີວິດຢູ່.
ເປັນຫຍັງເມືອງນີ້ຈະຮົກຮ້າງເສຍ?[18]ຖ້າພວກເຂົາເຫລົ່ານັ້ນເປັນຜູ້ປະກາດພຣະທັມ, ແລະຖ້າພຣະທັມຂອງພຣະຢາເວມາຈາກພວກເຂົາແທ້,
ກໍຂໍໃຫ້ພວກເຂົາອ້ອນວອນຕໍ່ພຣະຢາເວຈອມໂຍທາວ່າ ບໍ່ໃຫ້ເຄື່ອງໃຊ້ຊຶ່ງຢູ່ໃນພຣະວິຫານຂອງພຣະຢາເວ,
ແລະໃນພະລາຊະວັງຂອງກະສັດແຫ່ງຢູດາ, ແລະໃນນະຄອນເຢຣູຊາເລັມຖືກນຳໄປຍັງບາບີໂລນ.
[19]ພຣະຢາເວຈອມໂຍທາກ່າວດັ່ງນີ້ກ່ຽວກັບບັນດາເສົາ, ຂັນທອງສຳເລັດ, ແລະຂາຕັ້ງ, ແລະເຄື່ອງໃຊ້ອື່ນໆ ທີ່ເຫລືອຢູ່ໃນເມືອງນີ້—
[20]ບັນດາເຄື່ອງໃຊ້ທີ່ເນບູກາດເນັດຊາ ກະສັດແຫ່ງບາບີໂລນບໍ່ໄດ້ປຸ້ນເອົາໄປ ເມື່ອທ່ານໄດ້ຈັບເອົາເຢໂຮຢາກິນ ລາຊະໂອລົດຂອງເຢໂຮຢາກິມ,
ກະສັດຂອງຢູດາ, ແລະນະຄອນເຢຣູຊາເລັມຖືກກວາດຕ້ອນໄປເປັນຊະເລີຍຍັງນະຄອນບາບີໂລນ
ພ້ອມກັບບັນດາຂ້າລາຊະການຂອງນະຄອນເຢຣູຊາເລັມ.
[21]ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ກ່ຽວກັບເລື່ອງເຄື່ອງໃຊ້ຊຶ່ງຍັງເຫລືອຢູ່ໃນພຣະວິຫານຂອງພຣະຢາເວ,
ໃນພະລາຊະວັງຂອງກະສັດແຫ່ງຢູດາ, ແລະໃນນະຄອນເຢຣູຊາເລັມ,[22]'ເຄື່ອງໃຊ້ເຫລົ່ານີ້ຈະຖືກຂົນໄປຍັງບາບີໂລນ,
ແລະຈະຄ້າງຢູ່ບ່ອນນັ້ນຈົນເຖິງມື້ທີ່ເຮົາກັບມາຫາພວກມັນ—ນີ້ເປັນຄຳປະກາດຂອງພຣະຢາເວ— ແລ້ວເຮົາຈຶ່ງຈະນຳມັນກັບຂຶ້ນມາ
ແລະໃຫ້ກັບສູ່ສະຖານທີ່ນີ້.'"

 generated on Tue Jun 17 19:01:42 2025

28 [1]ມັນໄດ້ເກີດຂຶ້ນໃນປີນັ້ນ, ໃນຕົ້ນລາຊະການເຊເດກີຢາ ກະສັດແຫ່ງຢູດາ, ໃນເດືອນທີຫ້າປີທີສີ່ ແລະເດືອນທີຫ້າ, ຮານານີຢາ
ລູກຊາຍຂອງອັດຊູເຣ, ຜູ້ປະກາດພຣະທັມຈາກກິເບໂອນ, ໄດ້ເວົ້າກັບຂ້ານ້ອຍໃນພຣະວິຫານຂອງພຣະຢາເວ ຕໍ່ຫນ້າບັນດາປະໂລຫິດ
ແລະປະຊາຊົນທັງຫລາຍ. ລາວກ່າວວ່າ, [2]“ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ:
ເຮົາໄດ້ຫັກແອກຂອງກະສັດແຫ່ງບາບີໂລນແລ້ວ.

[3]ພາຍໃນສອງປີ ເຮົາຈະນຳເຄື່ອງໃຊ້ທັງຫມົດຂອງພຣະວິຫານແຫ່ງພຣະຢາເວກັບມາຍັງທີ່ນີ້
ຊຶ່ງເປັນພາຊະນະທີ່ເນບູກາດເນັດຊາກະສັດແຫ່ງບາບີໂລນປຸ້ນໄປຈາກທີ່ນີ້ ແລະຂົນໄປຍັງບາບີໂລນ. [4]ເຮົາຈະນຳເຢໂຮຢາກິນ
ລາຊະໂອລົດຂອງເຢໂຮຢາກິມ, ກະສັດແຫ່ງຢູດາ, ແລະບັນດາຜູ້ທີ່ຖືກກວາດຈາກຢູດາ ໄປຍັງບາບີໂລນກັບມາຍັງທີ່ນີ້—
ນີ້ເປັນຄຳປະກາດຂອງພຣະຢາເວ—ເພາະເຮົາຈະຫັກແອກຂອງກະສັດແຫ່ງບາບີໂລນ.”
[5]ດັ່ງນັ້ນ ເຢເຣມີຢາຜູ້ປະກາດພຣະທັມກໍເວົ້າກັບຮານານີຢາຜູ້ປະກາດພຣະທັມຕໍ່ຫນ້າບັນດາປະໂລຫິດ
ແລະຕໍ່ຫນ້າປະຊາຊົນທັງປວງຜູ້ຢືນຢູ່ໃນພຣະວິຫານຂອງພຣະຢາເວ. [6]ເຢເຣມີຢາຜູ້ປະກາດພຣະທັມກ່າວວ່າ, “ຂໍພຣະຢາເວຊົງເຮັດສິ່ງນີ້ເຖີດ!
ຂໍພຣະຢາເວຊົງຢືນຢັນຖ້ອຍຄຳທັງຫລາຍທີ່ທ່ານໄດ້ປະກາດນັ້ນເປັນຈິງ
ແລະຊົງນຳເຄື່ອງໃຊ້ແຫ່ງພຣະວິຫານຂອງພຣະຢາເວແລະບັນດາຜູ້ຖືກກວາດໄປເປັນຊະເລີຍທັງຫມົດກັບມາຈາກບາບີໂລນມາທີ່ນີ້.
[7]ຢ່າງໃດກໍຕາມ, ຂໍຟັງຖ້ອຍຄຳທີ່ຂ້ານ້ອຍກຳລັງຈະເວົ້າໃຫ້ທ່ານ ແລະໃຫ້ປະຊາຊົນທັງຫລາຍນີ້ໄດ້ຍິນ.
[8]ບັນດາຜູ້ປະກາດພຣະທັມຊຶ່ງຢູ່ກ່ອນຂ້ານ້ອຍ ແລະທ່ານ ຕັ້ງແຕ່ບູຮານໄດ້ປະກາດພຣະທັມເຖິງປະເທດຕ່າງໆ
ແລະຕາມດ້ວຍອານາຈັກທັງຫລາຍ, ກ່ຽວກັບເສິກສົງຄາມ, ການອຶດຢາກອາຫານ, ແລະພະຍາດລະບາດ.
[9]ສ່ວນຜູ້ປະກາດພຣະທັມທີ່ທຳນວຍວ່າຈະມີສັນຕິສຸກ—ຖ້າຖ້ອຍຄຳຂອງເຂົາເປັນຈິງ,
ແລ້ວຈຶ່ງຮູ້ວ່າພຣະຢາເວຊົງໃຊ້ຜູ້ປະກາດພຣະທັມນັ້ນແທ້.”
[10]ແຕ່ຮານານີຢາຜູ້ປະກາດພຣະທັມກໍປົດແອກອອກຈາກຄໍຂອງເຢເຣມີຢາ ຜູ້ປະກາດພຣະທັມ ແລະໄດ້ຫັກມັນເສຍ.
[11]ແລ້ວຮານານີຢາໄດ້ກ່າວຕໍ່ຫນ້າປະຊາຊົນທັງຫມົດວ່າ, “ພຣະຢາເວຊົງກ່າວດັ່ງນີ້ວ່າ: ຢ່າງນັ້ນແຫລະ ພາຍໃນສອງປີ
ເຮົາຈະຫັກແອກຈາກຄໍຂອງບັນດາປະຊາຊາດທັງຫມົດ ທີ່ເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ບັງຄັບໄວ້.”
ແລ້ວເຢເຣມີຢາຜູ້ປະກາດພຣະທັມກໍໄດ້ອອກໄປຕາມທາງຂອງເພິ່ນ.
[12]ຫລັງຈາກທີ່ຮານານີຢາຜູ້ປະກາດພຣະທັມຫັກແອກຈາກຄໍຂອງເຢເຣມີຢາຜູ້ປະກາດພຣະທັມ, ພຣະທັມຂອງພຣະຢາເວກໍມາຍັງເຢເຣມີຢາ,
ກ່າວວ່າ, [13]“ຈົ່ງໄປ ແລະບອກຮານານີຢາ, ແລະກ່າວວ່າ, ‘ພຣະຢາເວກ່າວດັ່ງນີ້ວ່າ: ພວກເຈົ້າໄດ້ຫັກແອກໄມ້,
ແຕ່ເຮົາຈະເຮັດແອກເຫລັກມາແທນທີ່.’ [14]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ຊົງກ່າວດັ່ງນີ້ວ່າ:
ເຮົາໄດ້ວາງແອກເຫລັກໄວ້ເທິງຄໍບັນດາປະຊາຊາດເຫລົ່ານີ້ທັງຫມົດໃຫ້ເຂົາບົວລະບັດເນບູກາດເນັດຊາກະສັດແຫ່ງບາບີໂລນ
ແລະພວກເຂົາຈະບົວລະບັດລາວ ເພາະເຮົາໄດ້ຍົກສັດປ່າໃນທົ່ງທັງຫມົດ ໃຫ້ລາວປົກຄອງ.”
[15]ຕໍ່ມາ ເຢເຣມີຢາຜູ້ປະກາດພຣະທັມໄດ້ເວົ້າກັບຮານານີຢາຜູ້ປະກາດພຣະທັມວ່າ, “ຂໍທ່ານຟັງຮານານີຢາ! ພຣະຢາເວບໍ່ໄດ້ຊົງໃຊ້ທ່ານ,
ແຕ່ທ່ານໄດ້ເຮັດໃຫ້ຊົນຊາດນີ້ວາງໃຈໃນຄວາມບໍ່ຈິງ. [16]ເພາະສະນັ້ນ ພຣະຢາເວກ່າວວ່າ: ເບິ່ງແມ, ເຮົາຈະຍ້າຍເຈົ້າໄປຈາກພື້ນໂລກ.
ເຈົ້າຈະຕ້ອງຕາຍໃນປີນີ້, ເພາະພວກເຈົ້າໄດ້ປະກາດເປັນການກະບົດຕໍ່ພຣະຢາເວ.” [17]ໃນເດືອນທີເຈັດຂອງປີດຽວກັນນັ້ນ,
ຮານານີຢາຜູ້ປະກາດພຣະທັມກໍຕາຍ.

29 [1]ຕໍ່ໄປນີ້ເປັນຖ້ອຍຄຳໃນຈົດຫມາຍ ຊຶ່ງເຢເຣມີຢາຜູ້ປະກາດພຣະທັມ
ຝາກໄປຈາກນະຄອນເຢຣູຊາເລັມເຖິງພວກຜູ້ໃຫຍ່ທີ່ເຫລືອຢູ່ຈາກພວກທີ່ເປັນຊະເລີຍ ແລະເຖິງບັນດາປະໂລຫິດ, ບັນດາຜູ້ປະກາດພຣະທັມ,
ແລະປະຊາຊົນທັງຫມົດ ຜູ້ຊຶ່ງເນບູກາດເນັດຊາໄດ້ໃຫ້ກວາດໄປຈາກນະຄອນເຢຣູຊາເລັມເຖິງບາບີໂລນ.
[2]ນີ້ເປັນເລື່ອງຫລັງຈາກກະສັດເຢໂຮຢາກີນ, ແລະພະລາຊີນີ, ບັນດາພວກເຈົ້ານາຍ, ບັນດາຜູ້ນຳຂອງຢູດາ ແລະນະຄອນເຢຣູຊາເລັມ,
ແລະບັນດາຊ່າງທີ່ໄດ້ຖືກສົ່ງອອກໄປຈາກນະຄອນເຢຣູຊາເລັມ.[3]ເພິ່ນໄດ້ສົ່ງຈົດຫມາຍນັ້ນໄປດ້ວຍມືຂອງເອລາສາ, ລູກຊາຍຂອງຊາຟານ,
ແລະເກມາຣີຢາ, ລູກຊາຍຮີນກີຢາ ໄປຍັງເນບູກາດເນັດຊາ ກະສັດແຫ່ງບາບີໂລນ.

[4]ຈົດຫມາຍນັ້ນກ່າວວ່າ, "ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ແກ່ບັນດາຜູ້ເປັນຊະເລີຍ
ຜູ້ຊຶ່ງເຮົາໄດ້ເນລະເທດໄປຈາກນະຄອນເຢຣູຊາເລັມ ເຖິງບາບີໂລນນັ້ນວ່າ,[5]'ຈົ່ງສ້າງເຮືອນທັງຫລາຍຂອງພວກເຈົ້າ ແລະອາໄສຢູ່ໃນເຮືອນນັ້ນ.
ຈົ່ງປູກສວນທັງຫລາຍ ແລະກິນພືດຜົນຂອງພວກມັນ.
[6]ຈົ່ງມີເຫລົ່າເມຍ ແລະໃຫ້ກຳເນີດບັນດາລູກຊາຍແລະບັນດາລູກສາວ. ຈົ່ງຫາເມຍໃຫ້ລູກຊາຍທັງຫລາຍຂອງພວກເຈົ້າ,
ແລະຍົກລູກສາວທັງຫລາຍຂອງພວກເຈົ້າໃຫ້ແຕ່ງງານເສຍ. ໃຫ້ພວກເຂົາຈະໃຫ້ກຳເນີດລູກຊາຍທັງຫລາຍ ແລະ
ລູກສາວທັງຫລາຍຈະທະວີເພີ່ມຫລາຍຂຶ້ນໃນບ່ອນນັ້ນ ເພື່ອພວກເຈົ້າບໍ່ເຫລືອຫນ້ອຍເກີນໄປ.
[7]ຈົ່ງສະແຫວງຫາສັນຕິສຸກຂອງເມືອງຊຶ່ງເຮົາໄດ້ເປັນເຫດໃຫ້ພວກເຈົ້າໃຫ້ໄປເປັນຊະເລີຍຢູ່ນັ້ນ, ແລະຈົ່ງປານີປານອມໃນນາມຂອງເຮົາ
ເພື່ອຈະພົບສັນຕິສຸກສຳລັບພວກເຈົ້າຖ້າມັນສະຫງົບ.'
[8]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, 'ຢ່າຍອມໃຫ້ຜູ້ປະກາດພຣະທັມຂອງພວກເຈົ້າທັງຫລາຍ
ແລະພວກຜູ້ທຳນວຍຂອງພວກເຈົ້າ ຜູ້ຢູ່ທ່າມກາງພວກເຈົ້າຫລອກລວງພວກເຈົ້າ, ແລະຢ່າເຊື່ອຄວາມຝັນຊຶ່ງພວກເຂົາທັງຫລາຍໄດ້ຝັນເຫັນ.
[9]ເພາະທີ່ພວກເຂົາກຳລັງປະກາດພຣະທັມຢ່າງຫລອກຫລວງແກ່ເຈົ້າໃນນາມຂອງເຮົາ. ເຮົາບໍ່ໄດ້ໃຊ້ພວກເຂົາໄປ—
ນີ້ເປັນຄຳປະກາດຂອງພຣະຢາເວ.'
[10]ເພາະພຣະຢາເວຊົງກ່າວດັ່ງນີ້ວ່າ, 'ເມື່ອບາບີໂລນໄດ້ປົກຄອງພວກເຈົ້າຄົບເຈັດສິບປີແລ້ວ, ເຮົາຈະຊ່ວຍເຫລືອພວກເຈົ້າ
ແລະຈະໃຫ້ຖ້ອຍຄຳອັນດີຂອງເຮົາສຳເລັດ ເພື່ອນຳພວກເຈົ້າກັບມາສູ່ສະຖານທີ່ນີ້.[11]ເພາະເຮົາຮູ້ແຜນການທັງຫລາຍທີ່ເຮົາມີໄວ້ສຳລັບພວກເຈົ້າ
—ນີ້ເປັນຄຳປະກາດຂອງພຣະຢາເວ—ເປັນແຜນການທັງຫລາຍເພື່ອສັນຕິສຸກ ບໍ່ແມ່ນເພື່ອໄພພິບັດ ເພື່ອຈະໃຫ້ອະນາຄົດ,
ເພື່ອໃຫ້ຄວາມຫວັງແກ່ພວກເຈົ້າ.
[12]ແລ້ວພວກເຈົ້າຈະຮ້ອງທູນຕໍ່ເຮົາ, ແລະໄປອະທິຖານຕໍ່ເຮົາ, ແລະເຮົາຈະຟັງພວກເຈົ້າ.[13]ເພາະພວກເຈົ້າຈະສະແຫວງຫາເຮົາ ແລະພົບເຮົາ,
ເມື່ອພວກເຈົ້າສະແຫວງຫາເຮົາດ້ວຍສິ້ນສຸດໃຈຂອງພວກເຈົ້າ.[14]ແລ້ວເຮົາຈະໃຫ້ພວກເຈົ້າພົບເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ— ແລະ
ເຮົາຈະໃຫ້ພວກເຈົ້າກັບສູ່ສະພາບດີ; ເຮົາຈະຮວບຮວມພວກເຈົ້າມາຈາກບັນດາປະຊາຊາດ ແລະ ຈາກທຸກບ່ອນ
ທີ່ເຮົາຂັບໄລ່ພວກເຈົ້າໄດ້ກະຈັດກະຈາຍຢູ່ນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເຮົາຈະນຳພວກເຈົ້າກັບມາຍັງບ່ອນທີ່ເຮົາເນລະເທດນັ້ນ.'
[15]ເພາະພວກເຈົ້າທັງຫລາຍໄດ້ກ່າວວ່າ ພຣະຢາເວໄດ້ຊົງໃຫ້ມີຜູ້ປະກາດພຣະທັມສຳລັບພວກເຮົາທັງຫລາຍໃນບາບີໂລນ,
[16]ພຣະຢາເວຊົງກ່າວດັ່ງນີ້ແກ່ກະສັດ ຜູ້ປະທັບເທິງພະທີ່ນັ່ງຂອງດາວິດ ແລະແກ່ປະຊາຊົນທັງຫມົດຜູ້ອາໄສຢູ່ໃນເມືອງນີ້,
ຄືບັນດາຍາດພີ່ນ້ອງຂອງພວກເຈົ້າ ຜູ້ບໍ່ໄດ້ຖືກເນລະເທດໄປກັບພວກເຈົ້າວ່າ—[17]ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ, 'ເບິ່ງແມ,
ເຮົາກຳລັງຈະສົ່ງດາບການອຶດຫິວອາຫານ ແລະພະຍາດລະບາດມາເຫນືອພວກເຂົາທັງຫລາຍ.
ເພາະເຮົາຈະເຮັດໃຫ້ພວກເຂົາເປັນເຫມືອນກັບຫມາກເດື່ອເຫດ ທີ່ບໍ່ດີ ຊຶ່ງເຫນົ່າຫລາຍຈົນບໍ່ສາມາດກິນໄດ້.
[18]ແລ້ວເຮົາຈະຂົ່ມເຫັງພວກເຂົາດ້ວຍດາບ, ການອຶດຫິວອາຫານ, ແລະພະຍາດລະບາດ
ແລະຈະເຮັດໃຫ້ພວກເຂົາເປັນທີ່ຢ້ານກົວໃນສາຍຕາຂອງຣາຊະອານາຈັກທັງຫມົດແຫ່ງແຜ່ນດິນໂລກ-- ໃຫ້ເປັນຄວາມສັ່ນໄຫວ,
ໃຫ້ເປັນທີ່ສາບແຊ່ງ ແລະໃຫ້ເປັນທີ່ຫນ້າກຽດຊັງ ແລະໃຫ້ເປັນທີ່ຫນ້າອັບອາຍ ທ່າມກາງບັນດາປະຊາຊາດຊຶ່ງເຮົາໄດ້ຂັບໄລ່ໃຫ້ເຂົາໄປຢູ່ນັ້ນ.
[19]ນີ້ເປັນເພາະວ່າພວກເຂົາບໍ່ເຊື່ອຟັງຖ້ອຍຄຳຂອງເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—ທີ່ເຮົາໄດ້ສົ່ງມາຍັງພວກເຂົາຢ່າງບໍ່ຂາດສາຍ,
ແຕ່ພວກເຈົ້າທັງຫລາຍບໍ່ຍອມຟັງ—ນີ້ເປັນຄຳປະກາດຂອງພຣະຢາເວ.'
[20]ດັ່ງນັ້ນ ພວກເຈົ້າທັງຫລາຍຈົ່ງຟັງພຣະທັມຂອງພຣະຢາເວ, ພວກເຈົ້າທັງປວງຜູ້ຊຶ່ງເຮົາສົ່ງໄປຈາກນະຄອນເຢຣູຊາເລັມເຖິງບາບີໂລນ,
[21]'ພຣະຢາເວຈອມໂຍທາ, ພຣະເຈົ້າຂອງອິດສະຣາເອນ, ກ່າວດັ່ງນີ້ກ່ຽວກັບອາຮາບ ລູກຊາຍຂອງໂກລາຢາ ແລະເຊເດກີຢາ
ລູກຊາຍມາອາເສຢາ, ຜູ້ຊຶ່ງໄດ້ປະກາດພຣທຳບໍ່ຈິງແກ່ພວກເຈົ້າໃນນາມຂອງເຮົາ: ເບິ່ງແມ,
ເຮົາກຳລັງຈະມອບເຂົາທັງສອງໄວ້ໃນມືຂອງເນບູກາດເນັດຊາ ກະສັດແຫ່ງບາບີໂລນ ແລະເພິ່ນຈະຂ້າເຂົາທັງສອງເສຍຕໍ່ຫນ້າຕໍ່ຕາພວກເຈົ້າ.
[22]ແລ້ວຄຳສາບແຊ່ງຖືກກ່າວກ່ຽວກັບຄົນເຫລົ່ານີ້ ໂດຍບັນດາຜູ້ທີ່ຖືກເນລະເທດຂອງຢູດາໃນບາບີໂລນ ຄຳສາບແຊ່ງຈະກ່າວວ່າ:
ຂໍພຣະຢາເວຊົງເຮັດກັບພວກເຈົ້າເຫມືອນເຊເດກີຢາ ແລະອາຮາບ ຜູ້ທີ່ກະສັດບາບີໂລນ ເຜົາເສຍດ້ວຍໄຟ.[23]ສິ່ງນີ້ຈະເກີດຂຶ້ນ
ເພາະສິ່ງທີ່ຫນ້າອັບອາຍທີ່ພວກເຂົາໄດ້ເຮັດໃນອິດສະຣາເອນ ເມື່ອພວກເຂົາໄດ້ລ່ວງປະເວນີກັບເມຍຂອງເພື່ອນບ້ານ
ແລະໄດ້ເວົ້າຖ້ອຍຄຳບໍ່ຈິງໃນນາມຂອງເຮົາ, ສິ່ງເຫລົ່ານີ້ຊຶ່ງເຮົາບໍ່ໄດ້ບັນຊາພວກເຂົາໃຫ້ກ່າວ. ເພາະເຮົາເປັນຜູ້ທີ່ຮູ້; ເຮົາເປັນພະຍານ—
ນີ້ເປັນຄຳປະກາດຂອງພຣະຢາເວ.
[24]"ກ່ຽວກັບເຊມາຢາ ຊາວເນເຮລາມ, ຈົ່ງກ່າວວ່າ:[25]'ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ຊົງກ່າວດັ່ງນີ້ວ່າ:
ເພາະພວກເຈົ້າໄດ້ສົ່ງຈົດຫມາຍໃນນາມຂອງພວກເຈົ້າໄປຍັງປະຊາຊົນທັງປວງຜູ້ຢູ່ໃນນະຄອນເຢຣູຊາເລັມ, ໄປຍັງເຊຟານີຢາ
ລູກຊາຍປະໂລຫິດມາອາເສຢາ, ແລະໄປຍັງປະໂລຫິດທັງປວງ ແລະໄດ້ກ່າວວ່າ,
[26]"ພຣະຢາເວໄດ້ຊົງເຮັດໃຫ້ພວກເຈົ້າເປັນປະໂລຫິດແທນປະໂລຫິດເຢໂຮຢາດາ ເພື່ອໃຫ້ເປັນຜູ້ດູແລພຣະວິຫານຂອງພຣະຢາເວ.

 generated on Tue Jun 17 19:01:42 2025

ເຈົ້າໄດ້ຢູ່ໃນການຄວບຄຸມຄົນຂອງປະຊາຊົນທັງປວງ ຜູ້ຊຶ່ງບ້າ ແລະເຮັດໃຫ້ຕົວພວກເຂົາເອງເປັນຜູ້ປະກາດພຣະທັມ.
ເຈົ້າຄວນຈັບພວກເຂົາໃສ່ຄຸກໄວ້ ແລະໃສ່ໂສ້ເສຍ.
[27]ດັ່ງນັ້ນບັດນີ້, ເປັນຫຍັງພວກເຈົ້າຈຶ່ງບໍ່ໄດ້ຕຳໜິເຢເຣມີຢາ ຊາວອານາໂທດ, ຜູ້ຊຶ່ງຕັ້ງຕົວເອງເປັນຜູ້ປະກາດພຣະທັມແກ່ເຈົ້າ?
[28]ເພາະລາວໄດ້ສົ່ງຈົດໝາຍມາຍັງເຮົາໃນບາບີໂລນ ແລະໄດ້ກ່າວວ່າ, 'ຈະເປັນເວລາທີ່ດົນນານ. ຈົ່ງສ້າງເຮືອນທັງຫລາຍ
ແລະອາໄສຢູ່ໃນເຮືອນນັ້ນ, ແລະຈົ່ງເຮັດສວນ
ແລະກິນຜົນທີ່ໄດ້ນັ້ນ.'"[29]ປະໂລຫິດເຊຟານີຢາອ່ານຈົດໝາຍນີ້ໃຫ້ຜູ້ປະກາດພຣະທັມເຢເຣມີຢາຜູ້ປະກາດພຣະທັມຟັງ.
[30]ແລ້ວພຣະທັມຂອງພຣະຢາເວກໍມາຍັງເຢເຣມີຢາ ກ່າວວ່າ,[31]"ຈົ່ງສົ່ງຖ້ອຍຄຳໄປເຖິງບັນດາຜູ້ເປັນຊະເລີຍທັງໝົດວ່າ,
'ພຣະຢາເວກ່າວກ່ຽວກັບເຊມາຢາຊາວເນເຮລາມວ່າ, ເພາະວ່າເຊມາຢາໄດ້ທຳນວຍແກ່ພວກເຈົ້າ ໃນຂະນະທີ່ເຮົາບໍ່ໄດ້ໃຊ້ລາວ
ແລະລາວໄດ້ເຮັດໃຫ້ພວກເຈົ້າວາງໃຈໃນຄຳບໍ່ຈິງ,[32]ເພາະສະນັ້ນພຣະຢາເວຊຶ່ງກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຈະລົງໂທດເຊມາຢາຊາວເນເຮລາມ
ແລະເຊື້ອສາຍຂອງລາວ ຈະບໍ່ມີຈັກຄົນໜຶ່ງທີ່ຈະອາໄສຢູ່ໃນທ່າມກາງຊົນຊາດນີ້. ລາວຈະບໍ່ໄດ້ເຫັນການດີທີ່ເຮົາຈະເຮັດແກ່ປະຊາຊົນຂອງເຮົາ
—ນີ້ເປັນຄຳປະກາດຂອງພຣະຢາເວກ່າວ—ເພາະລາວໄດ້ສອນການກະບົດຕໍ່ພຣະຢາເວ.'"


generated on Tue Jun 17 19:01:42 2025

30 1ພຣະຄຳຂອງພຣະຢາເວຊົງກ່າວຕໍ່ເຢເຣມີຢາ, ກ່າວວ່າ, 2"ນີ້ແມ່ນຖ້ອຍຄຳທີ່ພຣະຢາເວ, ພຣະເຈົ້າຂອງອິດສະຣາເອນ, ກ່າວດັ່ງນີ້ວ່າ,
'ຈົ່ງຂຽນໄວ້ເພື່ອຕົວເຈົ້າເອງໃນປຶ້ມມ້ວນຫົວຫນຶ່ງ. 3ເພາະເບິ່ງແມ, ວັນທັງຫລາຍກຳລັງຈະມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເມື່ອເຮົາຈະນຳຄວາມຮຸ່ງເຮືອງທັງຫລາຍແກ່ໄພ່ພົນຂອງເຮົາ, ຄືໃຫ້ອິດສະຣາເອນ ແລະຢູດາກັບຄືນສູ່ສະພາບເດີມ. ເຮົາເອງ, ພຣະຢາເວ,
ໄດ້ຊົງກ່າວແລ້ວ. ເພາະເຮົາຈະນຳພວກເຂົາມາຍັງແຜ່ນດິນທີ່ເຮົາໄດ້ມອບໃຫ້ບັນພະບູລຸດຂອງພວກເຂົາທັງຫລາຍ,
ແລະພວກເຂົາຈະໄດ້ເປັນເຈົ້າຂອງແຜ່ນດິນນັ້ນ."

4ຕໍ່ໄປນີ້ເປັນບັນດາພຣະທັມຊຶ່ງພຣະຢາເວຊົງກ່າວເຖິງ ອິດສະຣາເອນ ແລະຢູດາ ດັ່ງນີ້, 5"ເພາະພຣະຢາເວຊົງກ່າວດັ່ງນີ້ວ່າ
'ພວກເຮົາໄດ້ຍິນສຽງຮ້ອງໄຫ້ ຍ້ອນຕື່ນຕົກໃຈເປັນສຽງຢ້ານ ແລະບໍ່ແມ່ນສຽງແຫ່ງສັນຕິສຸກ.
6ຈົ່ງຖາມເຖີດ ແລະເບິ່ງວ່າ ຖ້າຜູ້ຊາຍຈະອອກລູກໄດ້ບໍ. ເປັນຫຍັງພວກເຈົ້າຈຶ່ງເຫັນຜູ້ຊາຍຫນຸ່ມທຸກຄົນ
ເອົາມືອູ້ມທ້ອງຂອງພວກເຂົາເຫມືອນຍິງຈະອອກລູກ? ເປັນຫຍັງຫນ້າຕາຂອງທຸກຄົນຈຶ່ງຂາວຊີດໄປ? 7ອານິຈັງ!
ເພາະວັນນັ້ນຈະຍິ່ງໃຫຍ່ເຫລືອເກີນ ບໍ່ມີວັນໃດເຫມືອນ. ມັນຈະເປັນເວລາກະວົນກະວາຍທຸກໃຈຂອງເຊື້ອສາຍຢາໂຄບ,
ແຕ່ພວກເຂົາກໍຍັງຈະໄດ້ຮັບການຊ່ວຍເຫລືອຈາກວັນນັ້ນໄປໄດ້.
8ເພາະມັນຈະເປັນໃນວັນນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ—ທີ່ເຮົາຈະປົດແອກອອກຈາກຄໍ, ແລະ
ແກ້ໂສ້ອອກຈາກພວກເຈົ້າເສຍ, ດັ່ງນັ້ນພວກຄົນຕ່າງຊາດຈະບໍ່ເຮັດໃຫ້ພວກເຈົ້າເປັນທາດຮັບໃຊ້ອີກຕໍ່ໄປ.
9ແຕ່ພວກເຈົ້າຈະນະມັດສະການພຣະຢາເວພຣະເຈົ້າຂອງພວກເຂົາ ແລະຮັບໃຊ້ດາວິດກະສັດຂອງພວກເຂົາ,
ຜູ້ທີ່ເຮົາຈະໃຫ້ເປັນກະສັດຂອງພວກເຂົາ.
10ດັ່ງນັ້ນເຈົ້າເອງ, ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ, ຢ່າສູ່ຢ້ານເລີຍ— ນີ້ເປັນຄຳປະກາດຂອງພຣະຢາເວ— ແລະຢ່າຕື່ນຕົກໃຈ,
ຊາວອິດສະຣາເອນເອີຍ. ເພາະເບິ່ງແມ, ເຮົາຈະຊ່ວຍໃຫ້ໄດ້ກັບຄືນມາຈາກປະເທດອັນໄກ
ແລະບັນດາລູກຫລານຂອງພວກເຈົ້າຈາກແຜ່ນດິນທີ່ຕົກເປັນນັກໂທດ. ເຊື້ອສາຍຂອງຢາໂຄບຈະກັບມາມີຊີວິດຢູ່ຢ່າງສະຫງົບສຸກ;
ພວກເຂົາຈະປອດໄພ, ແລະ ຈະບໍ່ມີໃຜເຮັດໃຫ້ພວກເຂົາຢ້ານກົວອີກຕໍ່ໄປ. 11ເພາະເຮົາຈະຢູ່ກັບພວກເຈົ້າ— ນີ້ເປັນຄຳປະກາດຂອງພຣະຢາເວ
— ເພື່ອຊ່ວຍພວກເຈົ້າໃຫ້ພົ້ນໄພ. ແລ້ວເຮົາຈະທຳລາຍບັນດາປະເທດທີ່ເຮົາໃຫ້ພວກເຈົ້າກະຈັດກະຈາຍໄປຢູ່ນັ້ນ.
ແຕ່ເຮົາຈະບໍ່ທຳລາຍພວກເຈົ້າຈົນຫມົດສິ້ນ, ເຖິງວ່າເຮົາຈະລົງໂທດພວກເຈົ້າຢ່າງເປັນທຳ ແລະ
ຈະບໍ່ປ່ອຍພວກເຈົ້າໄປໂດຍບໍ່ລົງໂທດຢ່າງແນ່ນອນ.'
12ພຣະຢາເວຊົງກ່າວດັ່ງນີ້ວ່າ, "ການບາດເຈັບຂອງພວກເຈົ້າບໍ່ສາມາດປິ່ນປົວໃຫ້ດີໄດ້; ບາດແຜຂອງພວກເຈົ້າກໍໄດ້ຕິດເຊື້ອ.
13ຈະບໍ່ມີໃຜປົກລະບັດຮັກສາພວກເຈົ້າ; ບໍ່ມີຢາຮັກສາບາດແຜຂອງພວກເຈົ້າທີ່ປິ່ນປົວໃຫ້ພວກເຈົ້າ.
14ພວກຄົນຮັກແພງທັງຫມົດຂອງພວກເຈົ້າໄດ້ລືມພວກເຈົ້າ. ພວກເຂົາຈະບໍ່ສົນໃຈພວກເຈົ້າອີກ,
ເພາະເຮົາໄດ້ເຮັດໃຫ້ພວກເຈົ້າບາດເຈັບໂດຍສັດຕູ ແລະເປັນການລົງໂທດເຫມືອນຢ່າງນາຍທີ່ໂຫດຮ້າຍ ເພາະວ່າຄວາມຊົ່ວທັງຫລາຍ
ແລະບາບຫລວງຫລາຍຂອງພວກເຈົ້າ. 15ເປັນຫຍັງພວກເຈົ້າຮ້ອງໄຫ້ ຂໍຄວາມຊ່ວຍເຫລືອ ເພາະຄວາມເຈັບປວດຂອງພວກເຈົ້າ?
ຄວາມເຈັບປວດຂອງພວກເຈົ້ານັ້ນປິ່ນປົວໃຫ້ດີບໍ່ໄດ້ດອກ, ເພາະວ່າຄວາມຜິດຢ່າງຍິ່ງຂອງພວກເຈົ້າ, ຄວາມບາບຫລວງຫລາຍຂອງພວກເຈົ້າ,
ດັ່ງນີ້ເຮົາໄດ້ເຮັດສິ່ງເຫລົ່ານີ້ແກ່ພວກເຈົ້າ.
16ດັ່ງນັ້ນ ທຸກຄົນໃດທຳຮ້າຍພວກເຈົ້າ ແລະສັດຕູຂອງພວກເຈົ້າທັງຫມົດຈະຕົກເປັນຊະເລີຍ. ເພາະຄົນເຫລົ່ານັ້ນທີ່ໄດ້ປຸ້ນພວກເຈົ້າກໍຈະຖືກປຸ້ນ,
ແລະເຮົາຈະເຮັດໃຫ້ທຸກຄົນທີ່ເອົາພວກເຈົ້າເປັນເຫຍື່ອ ເຮົາຈະໃຫ້ພວກເຂົາຕົກເປັນເຫຍື່ອເຊັ່ນກັນ. 17ເພາະເຮົາຈະນຳການຮັກສາແກ່ພວກເຈົ້າ;
ເຮົາຈະປິ່ນປົວບາດແຜໃຫ້ດີ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະເຮັດສິ່ງນີ້ເພາະພວກເຂົາທັງຫລາຍໄດ້ເອີ້ນພວກເຈົ້າວ່າ:
ພວກນອກຄອກ. ບໍ່ມີໃຜສົນໃຈເມືອງຊີໂອນ.'"
18ພຣະຢາເວຊົງກ່າວວ່າ, "ເບິ່ງເຖີດ, ເຮົາກຳລັງຈະນຳຄວາມຮຸ່ງເຮືອງທັງຫລາຍຂອງເຕັ້ນແຫ່ງຢາໂຄບກັບຄືນສູ່ສະພາບເດີມ ແລະ
ຄວາມເມດຕາໃນເລືອງທີ່ອາໄສຂອງພວກເຂົາ. ແລ້ວເມືອງຈະໄດ້ຖືກສ້າງຂຶ້ນໃຫມ່ ເທິງກອງຊາກຫັກພັງທັງຫລາຍ,
ແລະປ້ອມປາການຈະຕັ້ງຂຶ້ນອີກຄັ້ງໃນທີ່ຊຶ່ງມັນເຄີຍຢູ່. 19ແລ້ວບົດເພງຮ້ອງແຫ່ງການສັນລະເສີນ
ແລະສຽງຮ້ອງໂຮມ່ວນຊື່ນຈະອອກມາຈາກພວກເຂົາ, ເພາະເຮົາຈະເຮັດໃຫ້ພວກເຂົາເພີ່ມທະວີຫລາຍຂຶ້ນ; ຈະນຳກຽດມາໃຫ້ພວກເຂົາ
ດັ່ງນັ້ນພວກເຂົາຈະບໍ່ເປັນພຽງຜູ້ເລັກນ້ອຍ.
20ແລ້ວປະຊາຊົນຂອງພວກເຂົາກຈະເປັນເຫມືອນສະໄຫມກ່ອນ, ແລະການຊຸມນຸມຂອງພວກເຂົາຈະໄດ້ຮັບການສະຖາປະນາໄວ້ຕໍ່ຫນ້າເຮົາ
ເມື່ອເຮົາລົງໂທດຄົນທັງປວງທີ່ກົດຂີ່ຂົ່ມເຫັງພວກເຂົາ. 21ຜູ້ປົກຄອງຈະມາຈາກຊົນຊາດຂອງພວກເຂົາເອງ.
ລາວຈະອອກມາຈາກທ່າມກາງພວກເຂົາເອງ ເມື່ອເຮົາດຶງເຂົາເຂົ້າມາໃກ້ ແລະເມື່ອລາວເຂົ້າມາເຖິງເຮົາແລ້ວ ຖ້າເຮົາບໍ່ເຮັດສິ່ງນີ້,
ໃຜແດ່ຈະກ້າເຂົ້າມາໃກ້ເຮົາ? —ເຮົາພຣະຢາເວໄດ້ກ່າວດັ່ງນີ້ແຫລະ. 22ແລ້ວພວກເຈົ້າຈະເປັນໄພ່ພົນຂອງເຮົາ
ແລະເຮົາຈະເປັນພຣະເຈົ້າຂອງພວກເຈົ້າ."
23ເບິ່ງເຖີດ, ຄວາມຄຽດຮ້າຍຂອງພຣະຢາເວ, ເປັນດັ່ງລົມພະຍຸ, ລົມໂຫດຮ້າຍນີ້ຈະພັດອອກ. ມັນເປັນລົມພາຍຸຕໍ່ເນື່ອງ.
ມັນວົນວຽນຢູ່ເທິງຫົວຂອງຄົນຊົ່ວຊ້າ. 24ຄວາມຄຽດຮ້າຍຂອງພຣະຢາເວ ຈະບໍ່ຫມຸນກັບ
ຈົນກວ່າມັນຈະໄດ້ຊົງກະທຳໃຫ້ພຣະປະສົງໃນພຣະອົງ. ໃນວາລະສຸດທ້າຍ, ພວກເຈົ້າຈະເຂົ້າໃຈເລື່ອງນີ້."


generated on Tue Jun 17 19:01:42 2025

31 1“ເມື່ອເວລານັ້ນມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະເປັນພຣະເຈົ້າແຫ່ງຕະກູນທັງປວງຂອງອິດສະຣາເອນ,
ແລະພວກເຂົາທັງຫລາຍຈະເປັນໄພ່ພົນຂອງເຮົາ.”2ພຣະຢາເວຊົງກ່າວດັ່ງນີ້ວ່າ,
“ປະຊາຊົນອິດສະຣາເອນທີ່ເຫລືອຕາຍມາຈາກດາບໄດ້ຮັບຄວາມເມດຕາ ໃນຖິ່ນແຫ້ງແລ້ງກັນດານ;
ເຮົາຈະອອກໄປມອບການຢຸດພັກຜ່ອນໃຫ້ຊາວອິດສະຣາເອນເອີຍ.”3ພຣະຢາເວໄດ້ຊົງປາກົດແກ່ຂ້ານ້ອຍໃນອະດີດ ແລະໄດ້ຊົງກ່າວວ່າ,
“ອິດສະຣາເອນເອີຍ, ເຮົາໄດ້ຮັກແພງພວກເຈົ້າດ້ວຍຄວາມຮັກນິລັນດອນ. ດັ່ງນັ້ນ ເຮົາຈະຮັກແພງພວກເຈົ້າດ້ວຍຄວາມຊື່ສັດແຫ່ງພຣະສັນຍາ.

4ເຮົາຈະສ້າງພວກເຈົ້າຂຶ້ນອີກຄັ້ງ ດັ່ງນັ້ນພວກເຈົ້າຖືກສ້າງຂຶ້ນໃຫມ່, ໂອອິດສະຣາເອນສາວປອດເອີຍ ພວກເຈົ້າຈະມີກອງໂທນ
ແລະໄດ້ຟ້ອນລຳດ້ວຍຄວາມມ່ວນຊື່ນ.5ເຈົ້າຈະໄດ້ປູກຕົ້ນອະງຸ່ນທັງຫລາຍອີກຄັ້ງເທິງພູຊາມາເຣຍ; ຄົນສວນທັງຫລາຍກໍຈະປູກ
ແລະຈະໄດ້ກິນຫມາກຂອງມັນໄດ້ດີ.6ເພາະວ່າວັນນັ້ນມາເຖິງ ພວກຄົນເຝົ້າຍາມເຂດເທິງພູເອຟຣາອິມທັງຫລາຍຈະປະກາດວ່າ, ‘ມາເທາະ,
ໃຫ້ພວກເຮົາຂຶ້ນໄປເທິງພູຊີໂອນເທາະ, ໄປເຝົ້າພຣະຢາເວພຣະເຈົ້າຂອງພວກເຮົາ.'
7ພຣະຢາເວຊົງກ່າວວ່າ, “ຈົ່ງຮ້ອງເພງສັນລະເສີນດ້ວຍຄວາມມ່ວນຊື່ນສຳລັບອິດສະຣາເອນ ທີ່ເປັນຊົນຊາດໃຫຍ່!
ພຣະຢາເວຊົງຊ່ວຍໄພ່ພົນຂອງພຣະອົງໃຫ້ພົ້ນໄພ, ຊົງຊ່ວຍຄົນທັງປວງທີ່ເຫລືອຢູ່ຂອງອິດສະຣາເອນ.'
8ເບິ່ງເຖີດ, ເຮົາກຳລັງຈະໂຮມເອົາພວກເຂົາມາຈາກທາງເຫນືອທັງຫລາຍ. ເຮົາຈະໂຮມພວກເຂົາຈາກຫລາຍສ່ວນທີ່ໄກທີ່ສຸດຂອງແຜ່ນດິນໂລກ.
ພ້ອມທັງຄົນຕາບອດ ແລະຄົນເສຍຂາຈະຢູ່ທ່າມກາງພວກເຂົາ; ຜູ້ຍິງຖືພາທີ່ກຳລັງຈະອອກລູກກໍຈະມາ ຊົນຊາດໃຫຍ່ຈະກັບຄືນມາທີ່ນີ້.
9ໄພ່ພົນຂອງເຮົາຈະກັບມາດ້ວຍການຮ້ອງໄຫ້; ເຮົາຈະເລົ້າໂລມຕາມທີ່ພວກເຂົາໄດ້ຮ້ອງຂໍ.
ເຮົາຈະນຳພວກເຂົາມາຮອດກະແສນ້ຳໄຫລໃຫ້ຍ່າງໄປຕາມທາງຮາບພຽງ. ພວກເຂົາຈະບໍ່ສະດຸດ, ເພາະເຮົາເປັນພໍ່ຂອງອິດສະຣາເອນ,
ແລະເອຟຣາອິມເປັນລູກກົກຂອງເຮົາ.”
10“ຈົ່ງຟັງພຣະທັມຂອງພຣະຢາເວ, ບັນດາຊົນຊາດທັງຫລາຍເອີຍ ແລະຈົ່ງປະກາດຖ້ອຍຄຳຂອງເຮົາໃນແຜ່ນດິນແຄມທະເລທີ່ຢູ່ຫ່າງໄກ.
ເຈົ້າທັງຫລາຍ ບັນດາປະຊາຊາດຈົ່ງກ່າວ, ‘ພຣະອົງຜູ້ເຮັດໃຫ້ອິດສະຣາເອນກະຈັດກະຈາຍໄປ ຈະເຕົ້າໂຮມອີກຄັ້ງ
ແລະເບິ່ງແຍງພວກເຂົາເຫມືອນຄົນລ້ຽງແກະເບິ່ງແຍງແກະຂອງຕົນ.’11ເພາະພຣະຢາເວໄດ້ຊົງໄຖ່ຢາໂຄບໄວ້ແລ້ວ
ແລະໄດ້ໄຖ່ເຂົາຈາກເງື້ອມມືທີ່ແຂງແຮງເກີນກວ່າເຂົາ.
12ແລ້ວພວກເຂົາທັງຫລາຍຈະມາ ແລະຮ້ອງເພງດ້ວຍຄວາມມ່ວນຊື່ນຢູ່ເທິງພູຊີໂອນ.
ໃບຫນ້າຂອງພວກເຂົາຈະຊົມຊື່ນຍິນດີໃນສິ່ງຂອງທີ່ເຮົາໃຫ້, ຄືກັບເມັດເຂົ້າ ແລະເຫລົ້າອະງຸ່ນໃຫມ່, ຄືກັບນ້ຳມັນ ແລະລູກຂອງບັນດາສັດລ້ຽງ
ແລະຝູງສັດລ້ຽງທັງຫລາຍ. ເພາະຊີວິດທັງຫລາຍຂອງພວກເຂົາຈະເປັນເຫມືອນສວນທີ່ມີນ້ຳຫົດ,
ແລະພວກເຂົາຈະບໍ່ມີຄວາມໂສກເສົ້າເສຍໃຈອີກຕໍ່ໄປ.
13ແລ້ວພວກຍິງສາວປອດ ຈະປິຕິຍິນດີດ້ວຍການຟ້ອນລຳ ແລະພວກຄົນຫນຸ່ມ ແລະຄົນເຖົ້າຈະຢູ່ຮ່ວມກັນ ເພາະເຮົາຈະປ່ຽນຄວາມໂສກເສົ້າ
ເປັນຄວາມມ່ວນຊື່ນ. ເຮົາຈະນຳຄວາມກາຣຸນາຕໍ່ພວກເຂົາ ແລະເຮັດໃຫ້ຄວາມເສຍໃຈຈະກາຍເປັນຄວາມຍິນດີ.
14ແລ້ວເຮົາຈະໃຫ້ຊີວິດຂອງພວກປະໂລຫິດມີອາຫານກິນອີ່ມ ຢ່າງອຸດົມສົມບູນ. ປະຊາຊົນຂອງເຮົາຈະເຕັມອີ່ມດ້ວຍສິ່ງດີທຸກຢ່າງຂອງເຮົາ—
ນີ້ເປັນຄຳປະກາດຂອງພຣະຢາເວ.”
15ພຣະຢາເວຊົງກ່າວວ່າ, “ສຽງທີ່ໄດ້ຍິນຢູ່ໃນເມືອງຣາມານັ້ນ ເປັນສຽງໂອຍຄາງ ແລະຮ້ອງໄຫ້ດ້ວຍຄວາມຂົມຂື່ນ.
ນາງຣາເຊນຮ້ອງໄຫ້ຍ້ອນບັນດາລູກຂອງຕົນ. ນາງບໍ່ຍອມຟັງສຽງເລົ້າໂລມ, ຍ້ອນວ່າພວກເຂົາທັງຫລາຍນັ້ນໄດ້ຕາຍແລ້ວ."
16ພຣະຢາເວໄດ້ຊົງກ່າວດັ່ງນີ້ແຫລະ, “ຈົ່ງລະງັບສຽງຮ້ອງໄຫ້ຄ່ຳຄວນໄວ້ເຖີດ ແລະກັ້ນນ້ຳຕາຈາກດວງຕາຂອງພວກເຈົ້າເສຍ;
ເພາະວ່າຈະມີບຳເຫນັດສຳລັບການທົນທຸກຍາກຂອງພວກເຈົ້າ—ນີ້ເປັນຄຳປະກາດຂອງພຣະຢາເວ—
ລູກຫລານຂອງພວກເຈົ້າທັງຫລາຍຈະໄດ້ກັບມາຈາກແຜ່ນດິນຂອງສັດຕູ.17ຈະມີຄວາມຫວັງສຳລັບອະນາຄົດຂອງພວກເຈົ້າ—
ນີ້ເປັນຄຳປະກາດຂອງພຣະຢາເວ—ບັນດາເຊື້ອສາຍຂອງພວກເຈົ້າຈະໄດ້ກັບມາຂ້າງເຂດແດນທັງຫລາຍຂອງພວກເຂົາເອງ."
18“ເຮົາໄດ້ຍິນເອຟຣາອິມເວົ້າດ້ວຍຄວາມທຸກໃຈວ່າ, ‘ພຣະອົງຊົງໃສ່ໂທດຂ້ານ້ອຍ,
ແລະຂ້ານ້ອຍກໍຖືກລົງໂທດເປັນເຫມືອນລູກງົວທີ່ບໍ່ໄດ້ຮັບການຝຶກ. ຂໍຊົງໂຜດໃຫ້ພວກຂ້ານ້ອຍກັບຄືນທ້ອນ ແລະຂ້ານ້ອຍຈະຖືກນຳກັບ,
ເພາະພຣະອົງຊົງເປັນພຣະຢາເວຂອງຂ້ານ້ອຍ.19ເພາະຫລັງຈາກທີ່ຂ້ານ້ອຍໄດ້ຫລີກຫນີຈາກພຣະອົງ, ຂ້ານ້ອຍກໍຕີຕົນເອງດ້ວຍຄວາມເສຍໃຈ;
ຫລັງຈາກທີ່ຂ້ານ້ອຍໄດ້ຮັບຄຳສັ່ງສອນແລ້ວ, ຂ້ານ້ອຍກໍໄດ້ຕີຕົ້ນຂາຂອງຕົນເອງ. ຂ້ານ້ອຍຮູ້ສຶກລະອາຍ ແລະໄດ້ອັບອາຍຂາຍຫນ້າ,
ເພາະຂ້ານ້ອຍຕ້ອງທົນຮັບຄວາມເຊື່ອມເສຍ ເມື່ອຄາວຍັງຫນຸ່ມຢູ່ນັ້ນ.’20ຊາວເອຟຣາອິມເອີຍ, ລູກຊາຍທີ່ຮັກຍິ່ງຂອງເຮົາບໍ່ແມ່ນຫລື?
ເປັນທີ່ຮັກຂອງເຮົາ, ເປັນລູກຊາຍທີ່ເຮົາຊື່ນຊົມບໍ່ແມ່ນຫລື? ເມື່ອໃດກໍຕາມທີ່ເຮົາກ່າວໂທດພວກເຈົ້າ
ເຮົາກໍຍັງເອີ້ນເຈົ້າວ່າດວງໃຈທີ່ຮັກຂອງເຮົາຢ່າງແນ່ນອນ. ເພາະຢ່າງນີ້ຈິດໃຈຂອງເຮົາຈຶ່ງຫວນຄືນຫາພວກ.
ເຮົາຈະເມດຕາສົງສານຕໍ່ພວກເຂົາແນ່ນອນ—ນີ້ເປັນຄຳປະກາດຂອງພຣະຢາເວ."
21ຈົ່ງຫມາຍທາງທີ່ພວກເຈົ້າຈາກໄປນັ້ນ. ຈົ່ງເຮັດປ້າຍຊີ້ທາງໄວ້ສຳລັບພວກເຈົ້າເອງ. ຈົ່ງພິຈາລະນາໃຫ້ດີເຖິງທາງທີ່ຖືກຕ້ອງ,
ທາງຊຶ່ງພວກເຈົ້າຄວນຍ່າງໄປນັ້ນ. ອິດສະຣາເອນສາວປອດເອີຍ, ຈົ່ງກັບຄືນມາເຖີດ! ຈົ່ງກັບມາຍັງບ້ານເມືອງເຫລົ່ານີ້ຂອງພວກເຈົ້າ.
22ເຈົ້າຈະຍັງລັງເລໃຈຢູ່ອີກເທິງປານໃດ, ລູກສາວ ຜູ້ທີ່ບໍ່ສັດຊື່ເອີຍ? ເພາະພຣະຢາເວໄດ້ຊົງສ້າງສິ່ງໃຫມ່ຂຶ້ນມາເທິງແຜ່ນດິນໂລກແລ້ວ—
ຄືຜູ້ຍິງຈະລ້ອມຜູ້ຊາຍ.”
23ພຣະຢາເວຈອມໂຍທາ, ພຣະເຈົ້າຂອງອິດສະຣາເອນ, ຊົງກ່າວວ່າ, “ເມື່ອເຮົາເຮັດໃຫ້ປະຊາຊົນກັບຄືນສູ່ແຜ່ນດິນຂອງພວກເຂົາແລ້ວ
ເຈົ້າຈະເວົ້າສິ່ງນີ້ໃນປະເທດຢູດາ ແລະໃນຫົວເມືອງທັງຫລາຍ ອີກເທື່ອຫນຶ່ງວ່າ, ‘ຂໍພຣະຢາເວຊົງອວຍພຣະພອນ
ພວກເຈົ້າຜູ້ເປັນສະຖານທີ່ແຫ່ງຄວາມຊອບທຳທີ່ພຣະອົງສະຖິດຢູ່ ພວກເຈົ້າເປັນພູເຂົາສັກສິດບໍລິສຸດ.24ເພາະປະເທດຢູດາ
ແລະຫົວເມືອງຕ່າງໆນັ້ນຈະອາໄສຢູ່ດ້ວຍກັນທີ່ນັ້ນ ທັງບັນດາຊາວນາທັງຫລາຍ ແລະບັນດາຄົນລ້ຽງແກະ ພ້ອມກັບສັດທັງຫມົດຂອງພວກເຂົາ.
25ເພາະເຮົາຈະໃຫ້ນ້ຳດື່ມແກ່ຜູ້ຈິດໃຈທີ່ອ່ອນແຮງ ແລະເຮົາຈະເຕີມເຕັມທຸກຄົນທີ່ກຳລັງທົນທຸກຈາກຄວາມກະຫາຍ.”26ຫລັງຈາກນີ້
ຂ້ານ້ອຍກໍໄດ້ຕື່ນ ແລະຈຳໄດ້ວ່າການຫລັບນອນຂອງຂ້ານ້ອຍ ກໍສົດຊື່ນຂຶ້ນ.

[27]“ເບິ່ງເຖີດ, ວັນເຫລົ່ານັ້ນມາເຖິງ—ນີ້ເປັນການປະກາດຂອງພຣະຢາເວ—ເມື່ອເຮົາຈະເຮັດໃຫ້ເຊື້ອສາຍຂອງອິດສະຣາເອນ
ແລະຢູດາເຕັມໄປດ້ວຍເຜົ່າພັນມະນຸດ ແລະສັດປ່າ.[28]ແຕ່ກ່ອນ, ເຮົາໄດ້ເຝົ້າເບິ່ງພວກເຂົາເພື່ອຖອນພວກເຂົາອອກ
ແລະພັງພວກເຂົາລົງທຳລາຍເສຍ ແລະນຳເຫດຮ້າຍມາໃຫ້ພວກເຂົາ ແຕ່ໃນວັນທັງຫລາຍທີ່ກຳລັງມາ, ເຮົາຈຶ່ງຈະເຝົ້າເບິ່ງພວກເຂົາ,
ເພື່ອຈະສ້າງພວກເຂົາຂຶ້ນ ແລະປູກພວກເຂົາ—ນີ້ເປັນຄຳປະກາດຂອງພຣະຢາເວ.
[29]ເມື່ອວັນທັງຫລາຍມາເຖິງ ຈະບໍ່ມີໃຜກ່າວຕໍ່ໄປອີກວ່າ, ‘ພວກພໍ່ໄດ້ກິນຫມາກອະງຸ່ນສົ້ມ, ແຕ່ລູກຊ້ຳພັດເຂັດແຂ້ວ.
[30]ເພາະແຕ່ລະຄົນຈະຕ້ອງຕາຍໃນຄວາມຜິດບາບຂອງຕົນເອງ; ທຸກຄົນທີ່ກິນຫມາກອະງຸ່ນສົ້ມ ກໍຈະຕ້ອງເຂັດແຂ້ວ.”
[31]ເບິ່ງແມ, ເມື່ອວັນທັງຫລາຍກຳລັງຈະມາ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເມື່ອເຮົາຈະໃຫ້ຄຳຫມັ້ນສັນຍາໃຫມ່ແກ່ປະຊາຊົນອິດສະຣາເອນ ແລະຢູດາ.
[32]ມັນຈະບໍ່ຄືຄຳຫມັ້ນສັນຍານີ້ຈະບໍ່ເຫມືອນທີ່ເຮົາໄດ້ໃຫ້ບັນພະບູລຸດຂອງພວກເຂົາທັງຫລາຍ ຕອນເຮົາໄດ້ຈູງມືເຂົາອອກຈາກເອຢິບນັ້ນ.
ວັນເຫລົ່ານັ້ນໄດ້ເປັນວັນທັງຫລາຍທີ່ພວກເຂົາບໍ່ສັດຊື່ຕໍ່ຄຳຫມັ້ນສັນຍາຂອງເຮົາ ເຖິງວ່າເຮົາໄດ້ເປັນສາມີຂອງພວກເຂົາ —
ນີ້ເປັນຄຳປະກາດຂອງພຣະຢາເວ.
[33]ແຕ່ນີ້ຈະເປັນຄຳຫມັ້ນສັນຍາຊຶ່ງເຮົາຈະເຮັດແກ່ເຊື້ອສາຍອິດສະຣາເອນ ພາຍຫລັງວັນທັງຫລາຍເຫລົ່ານີ້—
ນີ້ເປັນຄຳປະກາດຂອງພຣະຢາເວກ່າວດັ່ງນີ້ວ່າ: ເຮົາຈະບັນຈຸພຣະທັມຂອງເຮົາໄວ້ໃນຈິດໃຈຂອງພວກເຂົາທັງຫລາຍ
ແລະເຮົາຈະຈາລຶກມັນໄວ້ເທິງດວງໃຈຂອງພວກເຂົາ, ເພາະເຮົາຈະເປັນພຣະເຈົ້າຂອງເຂົາ, ແລະພວກເຂົາຈະເປັນໄພ່ພົນຂອງເຮົາ.
[34]ຕໍ່ໄປຈະບໍ່ມີໃຜໃນພວກເຂົາສອນເພື່ອນບ້ານຂອງຕົນຕໍ່ໄປ ຫລືຜູ້ຊາຍຄົນຫນຶ່ງຈະບໍ່ສອນນ້ອງຊາຍຂອງເຂົາ ແລະກ່າວວ່າ,
‘ຈົ່ງຮູ້ຈັກພຣະຢາເວ!’ ເພາະວ່າພວກເຂົາທັງຫມົດ, ຕັ້ງແຕ່ຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດ, ຈະຮູ້ຈັກເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເຮົາຈະໃຫ້ອະໄພບາບແກ່ພວກເຂົາ ແລະຈະບໍ່ຈົດຈຳຄວາມຜິດຂອງພວກເຂົາອີກຕໍ່ໄປ.”
[35]ພຣະຢາເວຊົງກ່າວດັ່ງນີ້ວ່າ-- ພຣະຢາເວຜູ້ຊົງໃຫ້ດວງອາທິດສ່ອງແສງໃນກາງເວັນ ແລະຊົງໃຫ້ເດືອນດາວ
ແລະບັນດາດວງດາວເປັນແສງສະຫວ່າງໃນຕອນກາງຄືນ. ພຣະອົງຄືຜູ້ຊົງກວນໃຫ້ທະເລມີຄື້ນດັງສະເທືອນ ເພື່ອໃຫ້ມັນສົ່ງສຽງ
ພຣະນາມຂອງພຣະອົງຄື ພຣະຢາເວຈອມໂຍທາ. ພຣະອົງຊົງກ່າວດັ່ງນີ້ວ່າ,
[36]"ພຽງແຕ່ຖ້າຫາກສິ່ງຂອງຖາວອນເຫລົ່ານີ້ຈະຫາຍໄປຈາກສາຍຕາຂອງເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ—
ຕາບນັ້ນເຊື້ອສານຂອງອິດສະຣາເອນກໍຈະບໍ່ສິ້ນສຸດ ຈາກການເປັນຊົນຊາດຫນຶ່ງຕໍ່ຫນ້າເຮົາເປັນນິດ.”
[37]ພຣະຢາເວຊົງກ່າວວ່າ, “ພຽງແຕ່ຖ້າທ້ອງຟ້າສູງສຸດທັງຫລາຍເປັນທີ່ວັດແທກໄດ້
ແລະພຽງແຕ່ຖ້າຮາກຖານຂອງແຜ່ນດິນໂລກເບື້ອງລຸ່ມເປັນທີ່ໃຫ້ສຳລຫວດໄດ້, ເຮົາຈຶ່ງຈະປະຖິ້ມເຊື້ອສາຍທັງປວງຂອງອິດສະຣາເອນເສຍ
ຍ້ອນທຸກສິ່ງທີ່ພວກເຂົາໄດ້ກະທຳນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ.”
[38]“ເບິ່ງແມ, ເມື່ອທັງຫລາຍກຳລັງມາເຖິງ —ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອເມືອງນີ້ຖືກສ້າງຂຶ້ນໃຫມ່ເພື່ອເຮົາ,
ຕັ້ງແຕ່ຫໍຄອຍຮານາເນນ ເຖິງປະຕູແຈ.[39]ແລ້ວເສັ້ນເຂດແດນຈະຍາວໄປເຖິງພູ ກາເຣບ ແລ້ວຈະລຽງໄປເຖິງໂກອາ.
[40]ຫົວທັງຮ່ອມພູບ່ອນຝັງຊາກສົບທັງຫລາຍ ແລະກັບຂີ້ເທົ່າໄຟ ແລະທົ່ງນາທັງຫມົດຕາມລຳນ້ຳກິດໂຣນ ຈົນເຖິງປະຕູມ້າໄປທາງຕາເວັນອອກ
ຈະເປັນບ່ອນສັກສິດສຳລັບພຣະຢາເວ ເມືອງນີ້ຈະບໍ່ຖືກຖອນຮາກ ຫລື ທຳລາຍອີກຕໍ່ໄປເປັນນິດ.”


generated on Tue Jun 17 19:01:42 2025

32 [1]ພຣະທຳຊຶ່ງມາຈາກພຣະຢາເວເຖິງເຢເຣມີຢາໃນປີທີສິບແຫ່ງເຊເດກີຢາກະສັດຂອງຢູດາ, ຊຶ່ງເປັນປີທີສິບແປດຂອງເນບູກາດເນັດຊາ.
[2]ຄັ້ງນັ້ນ ກອງທັບຂອງກະສັດແຫ່ງບາບີໂລນກຳລັງອ້ອມນະຄອນເຢຣູຊາເລັມຢູ່
ແລະເຢເຣມີຢາຜູ້ປະກາດພຣະທັມຖືກຂັງຢູ່ໃນບໍລິເວນທະຫານຮັກສາພະອົງ ຊຶ່ງຢູ່ໃນພະລາຊະວັງຂອງກະສັດແຫ່ງຢູດາ.

[3]ເຊເດກີຢາກະສັດແຫ່ງຢູດາໄດ້ຂັງເພິ່ນໄວ້ ແລະໄດ້ກ່າວວ່າ, “ເປັນຫຍັງທ່ານຈຶ່ງປະກາດພຣະທັມ ແລະກ່າວວ່າ, ‘ພຣະຢາເວກ່າວດັ່ງນີ້ວ່າ:
ເບິ່ງແມ, ເຮົາຈະມອບເມືອງນີ້ໄວ້ໃນມືຂອງກະສັດແຫ່ງບາບີໂລນ, ແລະລາວຈະຍຶດເມືອງນີ້.
[4]ເຊເດກີຢາກະສັດແຫ່ງຢູດາຈະຫນີໄປບໍ່ພົ້ນຈາກມືຂອງຄົນເຄນເດຍ, ເພາະລາວຈະຖືກມອບໄວ້ໃນມືຂອງກະສັດແຫ່ງບາບີໂລນ.
ປາກຂອງລາວຈະໄດ້ເວົ້າກັນຕໍ່ປາກຂອງກະສັດ ແລະດວງຕາທັງຫລາຍຂອງລາວຈະແນມເຫັນພຣະເນດທັງຫລາຍຂອງກະສັດ.
[5]ລາວຈະນຳເຊເດກີຢາໄປຍັງບາບີໂລນ, ແລະລາວຈະຢູ່ບ່ອນນັ້ນຈົນກວ່າເຮົາຈະໄປຢ້ຽມລາວ—ນີ້ເປັນຄຳປະກາດຂອງພຣະຢາເວ.
ເຖິງແມ່ນພວກເຈົ້າຈະຕໍ່ສູ້ກັບຊາວເຄນເດຍ ພວກເຈົ້າກໍຈະບໍ່ສຳເລັດ.’”
[6]ເຢເຣມີຢາເວົ້າວ່າ, “ພຣະທັມຂອງພຣະຢາເວມາຍັງຂ້ານ້ອຍ, ກ່າວວ່າ,[7]‘ເບິ່ງແມ, ຮານາເມນລູກຊາຍຊານລູມ
ລຸງຂອງພວກເຈົ້າຈະມາຫາພວກເຈົ້າ ແລະກ່າວວ່າ, “ຈົ່ງຊື້ນາຂອງຂ້ານ້ອຍຊຶ່ງຢູ່ທີ່ອານາໂທດສຳລັບຕົວທ່ານເອງ,
ເພາະວ່າສິດທິຂອງການຊື້ນັ້ນເປັນຂອງທ່ານ.’’”
[8]ແລ້ວ, ດັ່ງທີ່ພຣະຢາເວໄດ້ປະກາດແລ້ວວ່າ, ຮານາເມນ, ລູກຊາຍຂອງຊານລູມອາ, ລຸງຂອງຂ້ານ້ອຍ,
ໄດ້ມາຫາຂ້ານ້ອຍທີ່ບໍລິເວນຂອງທະຫານຮັກສາພະອົງ, ແລະເວົ້າກັບຂ້ານ້ອຍວ່າ, ‘ຈົ່ງຊື້ນາຂອງຂ້ານ້ອຍ
ຊຶ່ງຢູ່ທີ່ອານາໂທດໃນແຜ່ນດິນເບັນຢາມິນ, ເພາະສິດທິຂອງການຖືກຳມະສິດເປັນຂອງທ່ານ. ຈົ່ງຊື້ໄວ້ສຳລັບຕົວທ່ານເອງ.’
ແລ້ວຂ້ານ້ອຍຈຶ່ງຮູ້ວ່ານີ້ເປັນພຣະທັມຂອງພຣະຢາເວ.[9]ດັ່ງນັ້ນ ຂ້ານ້ອຍກໍຊື້ນາທີ່ອານາໂທດຈາກຮານາເມນ, ລູກຂອງລຸງຂອງຂ້ານ້ອຍ, ແລະ
ໄດ້ຊັ່ງເງິນໃຫ້ແກ່ລາວ ຄືເງິນສິບເຈັດເຊເຂ.
[10]ແລ້ວຂ້ານ້ອຍກໍລົງນາມໃນຫນັງສືປະທັບຕາໄວ້, ໄດ້ພະຍານ ແລະເອົາຕາຊິງຊັ່ງເງິນ.[11]ຕໍ່ຈາກນັ້ນ
ຂ້ານ້ອຍກໍຮັບໃບຕາດິນຂອງການຊື້ທັງສະບັບທີ່ປະທັບຕາແລ້ວຕາມກົດຫມາຍ ແລະທຳນຽມ, ພ້ອມກັບສະບັບທີ່ເປີດຢູ່.
[12]ແລະຂ້ານ້ອຍກໍມອບເອກະສານຂອງການຊື້ໃຫ້ແກ່ບາຣຸກລູກຊາຍເນຣີຢາ ຜູ້ເປັນລູກຊາຍຂອງມາເຊຢາ ຕໍ່ຫນ້າຮານາເມນ,
ລູກຂອງລຸງຂອງຂ້ານ້ອຍ, ໃນສາຍຕາຂອງພະຍານຜູ້ທີ່ລົງນາມໃນເອກະສານການຊື້ ແລະຕໍ່ຫນ້າບັນດາຊາວຢູດາ
ຜູ້ຊຶ່ງນັ່ງຢູ່ໃນບໍລິເວນທະຫານຮັກສາພະອົງ.
[13]ດັ່ງນັ້ນຂ້ານ້ອຍກໍກ່າວເນັ້ນບາຣຸກຕໍ່ຫນ້າພວກເຂົາທັງຫລາຍ, ຂ້ານ້ອຍກ່າວວ່າ,[14]‘ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ,
ຊົງກ່າວດັ່ງນີ້ວ່າ: ຈົ່ງເອົາເອກະສານເຫລົ່ານີ້ໄປເສຍ, ທັງເອກະສານຂອງການຊື້ທີ່ປະທັບຕາ ກັບສະບັບທີ່ເປີດນີ້ ແລະບັນຈຸໄວ້ໃນພາຊະນະດິນ
ເພື່ອຈະຫົນຢູ່ໄດ້ດົນນານ.[15]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ຊົງກ່າວດັ່ງນີ້ວ່າ: ບ້ານເຮືອນທັງຫລາຍ,
ແລະໄຮ່ນາທັງຫລາຍ, ແລະສວນອະງຸ່ນທັງຫລາຍ ຈະມີການຖືກຳມະສິດກັນອີກໃນແຜ່ນດິນນີ້.”
[16]ຫລັງຈາກທີ່ຂ້ານ້ອຍມອບເອກະສານການຊື້ໃຫ້ແກ່ບາຣຸກ ລູກຊາຍເນຣີຢາແລ້ວ, ຂ້ານ້ອຍໄດ້ອະທິຖານຕໍ່ພຣະຢາເວວ່າ,[17]‘ອະນິຈັງ,
ຂ້າແດ່ພຣະຢາເວພຣະຜູ້ເປັນເຈົ້າ! ເບິ່ງແມ! ແມ່ນພຣະອົງເອງ ຜູ້ໄດ້ຊົງສ້າງຟ້າສະຫວັນ ແລະແຜ່ນດິນໂລກ
ດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ ແລະດ້ວຍພຣະຫັດຊຶ່ງຢຽດອອກຂອງພຣະອົງ
ສຳລັບພຣະອົງບໍ່ມີສິ່ງໃດທີ່ຍາກເກີນສຳລັບພຣະອົງທີ່ຈະຊົງກະທຳ.[18]ພຣະອົງຊົງສະແດງຄວາມເມດຕາທີ່ຊື່ສັດຕໍ່ຄົນເປັນພັນໆ
ແລະຊົງເທຄວາມຊົ່ວຊ້າຂອງຄົນເຫລົ່ານັ້ນໃຫ້ຕົກເຖິງລູກຫລານຂອງພວກເຂົາທີ່ສືບຕໍ່ຈາກພວກເຂົາມາ. ພຣະອົງຊົງເປັນພຣະເຈົ້າຜູ້ຍິ່ງໃຫຍ່
ແລະຊົງຣິດທານຸພາບ; ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ.
[19]ພຣະອົງຊົງມີປັນຍາທີ່ແຫລມຄົມ ແລະຊົງຣິດທານຸພາບໃນພະລາຊະກິດທັງປວງ,
ເພາະພຣະເນດຂອງພຣະອົງຊົງເຫັນທຸກການດຳເນີນຊີວິດຂອງມະນຸດ ຊົງປະທານແຕ່ລະຄົນໃນສິ່ງທີ່ພວກເຂົາປະພຶດ
ແລະຕາມການກະທຳທັງຫລາຍຕາມທີ່ພວກເຂົາຄວນໄດ້ຮັບ.[20]ພຣະອົງໄດ້ຊົງເປັນຜູ້ສະແດງຫມາຍສຳຄັນ
ແລະການອັດສະຈັນໃນແຜ່ນດິນເອຢິບ. ແລະຈົນເຖິງສະໄຫມນີ້ ກໍຊົງສະແດງໃນອິດສະຣາເອນ ແລະທ່າມກາງມະນຸດຊາດ,
ພຣະອົງໄດ້ຊົງເຮັດໃຫ້ພຣະນາມຊ່າລືໄປ.[21]ພຣະອົງໄດ້ຊົງນຳອິດສະຣາເອນປະຊາຊົນຂອງພຣະອົງອອກຈາກແຜ່ນດິນເອຢິບ
ດ້ວຍຫມາຍສຳຄັນ ແລະການອັດສະຈັນ, ດ້ວຍພຣະຫັດເຂັ້ມແຂງ, ແລະພຣະຫັດທີ່ຢຽດອອກດ້ວຍຫນ້າຢ້ານກົວຢ່າງຍິ່ງ.
[22]ແລ້ວພຣະອົງຊົງປະທານແຜ່ນດິນນີ້ແກ່ພວກເຂົາ—ຊຶ່ງພຣະອົງຊົງປະຕິຍານແກ່ບັນພະບູລຸດຂອງເຂົາທັງຫລາຍວ່າຈະປະທານແກ່ພວກເຂົາ—
ຄືແຜ່ນດິນ ຊຶ່ງມີນ້ຳນົມ ແລະນ້ຳເຜິ້ງໄຫລບໍລິບູນ.[23]ດັ່ງນັ້ນພວກເຂົາກໍໄດ້ເຂົ້າໄປ ແລະຖືກຳມະສິດແຜ່ນດິນນັ້ນ
ແຕ່ພວກເຂົາບໍ່ໄດ້ເຊື່ອຟັງພຣະສຸລະສຽງຂອງພຣະອົງ ຫລືດຳເນີນຊີວິດຕາມພຣະບັນຍັດຂອງພຣະອົງ.
ພວກເຂົາບໍ່ໄດ້ເຮັດສິ່ງທັງປວງຊຶ່ງພຣະອົງຊົງບັນຊາພວກເຂົາ ໃຫ້ເຮັດເລີຍ
ເພາະສະນັ້ນພຣະອົງຈຶ່ງຊົງເຮັດໃຫ້ເຫດຮ້າຍທັງຫມົດນີ້ມາເຖິງພວກເຂົາ.
[24]ເບິ່ງແມ! ກອງດິນທີ່ອ້ອມຢູ່ໄດ້ມາໄດ້ມາເຖິງເມືອງ ເພື່ອຈະຍຶດເອົາແລ້ວ. ເພາະເຫດດ້ວຍດາບ, ການອຶດຫິວອາຫານ, ແລະ ພະຍາດລະບາດ,
ເມືອງນີ້ກໍໄດ້ຖືກມອບໄວ້ໃນມືຂອງຄົນເຄນເດຍຜູ້ກຳລັງຕໍ່ສູ້ຢູ່ນັ້ນ ເພາະສິ່ງພຣະອົງກ່າວກໍກຳລັງເປັນໄປຢ່າງນັ້ນແລ້ວ, ແລະເບິ່ງແມ,
ພຣະອົງຊົງກຳລັງທອດພຣະເນດຢູ່.[25]ແລ້ວພຣະອົງເອງຍັງໄດ້ຊົງກ່າວແກ່ຂ້ານ້ອຍວ່າ, “ຈົ່ງເອົາເງິນຊື້ນາສຳລັບຕົວເຈົ້າເອງ
ແລະຫາພວກພະຍານເສຍ ເຖິງແມ່ນວ່າເມືອງນັ້ນຈະຖືກມອບໄວ້ໃນມືຂອງຄົນເຄນເດຍ.’”
[26]ພຣະທັມຂອງພຣະຢາເວມາຍັງເຢເຣມີຢາ, ກ່າວວ່າ,[27]“ເບິ່ງແມ! ເຮົາຄືພຣະຢາເວພຣະເຈົ້າຂອງບັນດາມະນຸດຊາດທັງຫມົດ.
ສຳລັບເຮົາມີສິ່ງໃດທີ່ຍາກເກີນໄປບໍ?[28]ເພາະສະນັ້ນພຣະຢາເວກ່າວດັ່ງນີ້ວ່າ, ‘ເບິ່ງແມ, ເຮົາຈະມອບເມືອງນີ້ໄວ້ໃນມືຂອງຊາວເຄນເດຍ
ແລະໃນມືຂອງເນບູກາດເນັດຊາ, ກະສັດແຫ່ງບາບີໂລນ. ລາວຈະຍຶດເອົາມັນແນ່ນອນ.
[29]ຊາວເຄນເດຍຜູ້ຕໍ່ສູ້ກັບເມືອງນີ້ຈະມາ ແລະຈູດໄຟເຜົາເມືອງນີ້ເສຍດ້ວຍໄຟໃຫ້ໄຫມ້ຫມົດ,
ທັງບັນດາເຮືອນທີ່ພວກເຂົາເຜົາເຄື່ອງຖວາຍພະບາອານຢູ່ເທິງຫລັງຄາທັງຫລາຍ ແລະເຄື່ອງດື່ມບູຊາຖວາຍແກ່ພະອື່ນໆ

 generated on Tue Jun 17 19:01:42 2025

ເພື່ອຍົວະເຍົ້າເຮົາໃຫ້ໂກດຮ້າຍ.[30]ເພາະເຊື້ອສາຍຂອງອິດສະຣາເອນ
ແລະເຊື້ອສາຍຂອງຢູດາໄດ້ເປັນປະຊາຊົນທີ່ເຮັດຄວາມຊົ່ວໃນສາຍຕາຂອງເຮົາຕັ້ງແຕ່ຫນຸ່ມສາວ.
ປະຊາຊົນອິດສະຣາເອນໄດ້ຍົວະເຍົ້າເຮົາໃຫ້ໂກດຮ້າຍດ້ວຍການກະທຳທັງຫລາຍດ້ວຍມືຂອງຕົນ—ນີ້ເປັນຄຳປະກາດຂອງພຣະຢາເວ.
[31]ພຣະຢາເວຊົງປະກາດວ່າ ເມືອງນີ້ໄດ້ຍົວະເຍົ້າຄວາມໂກດຮ້າຍ ແລະຄວາມພິໂລດຂອງເຮົາ. ຕັ້ງແຕ່ມື້ທີ່ໄດ້ສ້າງມັນຂຶ້ນມາຈົນເຖິງມື້ນີ້.
ເພາະສະນັ້ນເຮົາຈະຖອນອອກໄປເສຍຈາກຫນ້າຂອງເຮົາ.[32]ເພາະວ່າຄວາມຊົ່ວທັງຫມົດຂອງປະຊາຊົນອິດສະຣາເອນ ແລະຢູດາ,
ຊຶ່ງພວກເຂົາໄດ້ເຮັດໃຫ້ເຮົາຢາກຮ້າຍ—ຄືທັງຕົວພວກເຂົາ, ບັນດາກະສັດ, ພວກເຈົ້ານາຍ, ບັນດາປະໂລຫິດ,
ແລະຜູ້ປະກາດພຣະທັມທຸກຄົນໃນຢູດາ ແລະຊາວນະຄອນເຢຣູຊາເລັມ.
[33]ພວກເຂົາທັງຫລາຍໄດ້ຫັນຫລັງໃຫ້ເຮົາ ແທນທີ່ຈະຫັນຫນ້າຂອງພວກເຂົາ, ເຖິງວ່າເຮົາໄດ້ສອນພວກເຂົາຢູ່ຢ່າງບໍ່ຢຸດຢັ້ງ.
ແຕ່ກໍບໍ່ມີຈັກຄົນດຽວໄດ້ຟັງທີ່ຈະຮັບຄຳສັ່ງສອນຂອງເຮົາ.[34]ພວກເຂົາໄດ້ຕັ້ງບັນດາຮູບເຄົາລົບທີ່ຫນ້າກຽດຊັງຂອງຕົນໄວ້ໃນພຣະວິຫານ
ຊຶ່ງເອີ້ນຕາມນາມຂອງເຮົາ ອັນເຮັດໃຫ້ມີມົນທິນ.[35]ພວກເຂົາໄດ້ສ້າງແທ່ນບູຊາອັນສູງສຳລັບພະບາອານໃນພູເຂົາແຫ່ງຮິນໂນມ
ເພື່ອຖວາຍລູກຊາຍ ແລະລູກສາວຂອງຕົນຢ່າງລຸຍໄຟ ແດ່ພະໂມເລັກ. ເຮົາບໍ່ໄດ້ບັນຊາພວກເຂົາ ຫລືມີຢູ່ໃນຈິດໃຈຂອງເຮົາວ່າ.
ພວກເຂົາຄວນຈະເຮັດສິ່ງຫນ້າກຽດຊັງນີ້ ແລະດັ່ງນັ້ນເຮັດໃຫ້ຢູດາຜິດບາບ.’
[36]ເພາະສະນັ້ນ, ເຮົາເອງ, ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວກ່ຽວກັບເມືອງນີ້ແກ່ພວກເຈົ້າທັງຫລາຍວ່າ,
‘ເມືອງນີ້ຈະຖືກຍົກໄວ້ໃນມືຂອງກະສັດແຫ່ງບາບີໂລນ ດ້ວຍດາບ, ດ້ວຍການອຶດຫິວອາຫານ, ແລະດ້ວຍພະຍາດລະບາດ.’[37]ເບິ່ງແມ,
ເຮົາຈະຮວບຮວມພວກເຂົາມາຈາກປະເທດທັງປວງ ຊຶ່ງເຮົາໄດ້ຂັບໄລ່ເຂົາໃຫ້ໄປຢູ່, ດ້ວຍຄວາມພິໂລດ,
ແລະຄວາມໂກດຮ້າຍຢ່າງຮຸນແຮງຂອງເຮົາ. ເຮົາກຳລັງຈະນຳພວກເຂົາກັບມາຍັງທີ່ນີ້ ແລະຈະໃຫ້ພວກເຂົາອາໄສຢູ່ຢ່າງປອດໄພ.
[38]ແລ້ວພວກເຂົາຈະເປັນປະຊາຊົນຂອງເຮົາ, ແລະເຮົາຈະເປັນພຣະເຈົ້າຂອງພວກເຂົາ.[39]ເຮົາຈະໃຫ້ໃຈດຽວ ແລະທາງດຽວແກ່ພວກເຂົາ
ເພື່ອພວກເຂົາຈະຢຳເກງເຮົາຢູ່ທຸກວັນ ເພື່ອເປັນປະໂຫຍດແກ່ເຂົາ ແລະແກ່ລູກຫລານຂອງພວກເຂົາທີ່ຕາມມາ.
[40]ແລ້ວເຮົາຈະເຮັດຄຳຫມັ້ນສັນຍານິລັນດອນກັບພວກເຂົາວ່າເຮົາຈະບໍ່ຫັນຈາກການເຮັດດີແກ່ເຂົາທັງຫລາຍ.
ເຮົາຈະບັນຈຸຄວາມຢຳເກງເຮົາໄວ້ໃນໃຈຂອງພວກເຂົາ ເພື່ອວ່າເຂົາຈະບໍ່ໄດ້ຫັນໄປຈາກເຮົາ.
[41]ແລ້ວເຮົາຈະປິຕິຍິນດີໃນການເຮັດດີແກ່ເຂົາ ແລະເຮົາຈະປູກເຂົາໄວ້ໃນແຜ່ນດິນນີ້ດ້ວຍຄວາມຫມັ້ນພຽນ ດ້ວຍສຸດໃຈຂອງເຮົາ
ແລະສຸດຈິດຂອງເຮົາ.[42]ເພາະພຣະຢາເວກ່າວດັ່ງນີ້ວ່າ, 'ດັ່ງທີ່ເຮົາໄດ້ນຳເອົາຄວາມຮ້າຍອັນຍິ່ງໃຫຍ່ທັງຫມົດມາເຫນືອຊົນຊາດນີ້ສັນໃດ,
ດັ່ງນັ້ນເຮົາກໍຈະນຳຄວາມດີທັງຫມົດຊຶ່ງເຮົາໄດ້ສັນຍາໄວ້ມາເຫນືອພວກເຂົາສັນນັ້ນ.
[43]ແລ້ວພວກເຂົາຈະຊື້ຂາຍນາກັນໃນແຜ່ນດິນ ຊຶ່ງພວກເຈົ້າກ່າວເຖິງວ່າ. “ນີ້ເປັນແຜ່ນດິນທີ່ຮົກຮ້າງເສຍ ຊຶ່ງບໍ່ມີມະນຸດ ຫລື ສັດ.
ມັນໄດ້ຖືກມອບໄວ້ໃນມືຂອງຄົນເຄນເດຍ.[44]ພວກເຂົາຈະຊື້ນາເຫລົ່ານັ້ນດ້ວຍເງິນ
ແລະຈະຂຽນເອກະສານກໃນຫນັງສືມ້ວນທັງຫລາຍທີ່ໄດ້ປະທັບຕາ. ພວກເຂົາຈະປະຊຸມພະຍານທັງຫລາຍໃນແຜ່ນດິນຂອງເບັນຢາມິນ,
ໃນທີ່ຕ່າງແຖບນະຄອນເຢຣູຊາເລັມ ແລະໃນຫົວເມືອງທັງຫລາຍຂອງຢູດາ, ໃນຫົວເມືອງແຖບແດນເມືອງພູເຂົາໃນຫົວເມືອງແຖບພູເຂົາ,
ແລະໃນຫົວເມືອງທັງຫລາຍຂອງເນເກບ. ເພາະເຮົາຈະໃຫ້ການເປັນຊະເລີຍຂອງພວກເຂົາທັງຫລາຍກັບສູ່ສະພາບເດີມ—
ນີ້ເປັນຄຳປະກາດຂອງພຣະຢາເວ.’”

 generated on Tue Jun 17 19:01:42 2025

33 [1]ແລ້ວພຣະທັມຂອງພຣະຢາເວມາໄດ້ມາຍັງເຢເຣມີຢາເທື່ອທີສອງ, ເມື່ອເພິ່ນຍັງຖືກກັກຕົວຢູ່ໃນບໍລິເວນຂອງທະຫານຮັກສາພະອົງ,
ກ່າວວ່າ,[2]“ພຣະຢາເວຜູ້ຊົງສ້າງ, ຊົງກ່າວດັ່ງນີ້—ພຣະຢາເວ, ຜູ້ຊົງປັ້ນເພື່ອສະຖາປະນາໄວ້—ພຣະຢາເວຄືພຣະນາມຂອງພຣະອົງ,
[3]‘ຈົ່ງເວົ້າຕໍ່ເຮົາ ແລະເຮົາຈະຕອບພວກເຈົ້າ ແລະຈະສະແດງສິ່ງທີ່ຍິ່ງໃຫຍ່ ແລະສະແດງສິ່ງຍິ່ງໃຫຍ່ທັງຫລາຍ
ຂໍ້ລຶກລັບທັງປວງຊຶ່ງພວກເຈົ້າບໍ່ເຂົ້າໃຈ.’

[4]ເພາະວ່າພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ໄດ້ຊົງກ່າວດັ່ງນີ້ກ່ຽວກັບເລື່ອງເຮືອນຊານທັງຫລາຍໃນນະຄອນນີ້
ແລະກ່ຽວພະລາຊະວັງທັງຫລາຍຂອງບັນດາກະສັດແຫ່ງຢູດາ ຊຶ່ງຖືກຮື້ລົງເພື່ອເຮັດກອງດິນຕໍ່ຕ້ານ ແລະດາບ.
[5]‘ພວກຄົນເຄນເດຍກຳລັງຈະມາເພື່ອສູ້ຮົບ ແລະຖະລົ່ມບ້ານເຮືອນທັງຫລາຍເຕັມໄປດ້ວຍສົບຄົນທີ່ເຮົາສັ່ງຫານດ້ວຍຄວາມໂກດຮ້າຍ
ແລະຄວາມພິໂລດຂອງເຮົາ, ເມື່ອເຮົາໄດ້ເຊື່ອງຫນ້າຂອງເຮົາຈາກນະຄອນນີ້ ເນື່ອງດ້ວຍຄວາມຊົ່ວຂອງພວກເຂົາ.
[6]ເບິ່ງແມ, ເຮົາກຳລັງຈະນຳການປິ່ນປົວ ແລະການຮັກສາມາໃຫ້, ເພາະເຮົາຈະຮັກສາເຂົາທັງຫລາຍໃຫ້ຫາຍ ແລະຈະນຳຄວາມອຸດົມສົມບູນ,
ສັນຕິສຸກ ແລະຄວາມຫນ້າເຊື່ອຖືມາໃຫ້ພວກເຂົາ.[7]ເພາະເຮົາຈະນຳຄວາມຮຸ່ງເຮືອງທັງຫລາຍມາໃຫ້ຢູດາ
ແລະອິດສະຣາເອນກັບສູ່ສະພາບເດີມ; ເຮົາຈະສ້າງພວກເຂົາເສຍໃຫມ່ເຫມືອນກັບທີ່ພວກເຂົາເປັນມາແຕ່ເດີມນັ້ນ.
[8]ແລ້ວເຮົາຈະຊຳລະພວກເຂົາຈາກບັນດາຄວາມຜິດບາບທັງສິ້ນ ຊຶ່ງພວກເຂົາໄດ້ເຮັດຕໍ່ເຮົາ.
ເຮົາຈະໃຫ້ອະໄພບັນດາຄວາມຊົ່ວຊ້າຊຶ່ງເຂົາໄດ້ເຮັດ, ແລະໃນທຸກວິທີທາງທີ່ພວກເຂົາກະບົດຕໍ່ເຮົາ.
[9]ເພາະນະຄອນນີ້ຈະກາຍເປັນສິ່ງທີ່ຊື່ນບານສຳລັບເຮົາ, ເປັນທີ່ສັນເສີນ ແລະ ເປັນກຽດຕໍ່ຫນ້າບັນດາປະຊາຊາດທັງຫມົດແຫ່ງແຜ່ນດິນໂລກ
ຊຶ່ງຈະໄດ້ຍິນເຖິງຄວາມດີທັງຫມົດ ຊຶ່ງເຮົາກຳລັງຈະເຮັດເພື່ອພວກເຂົາ. ແລ້ວພວກເຂົາຈະຢ້ານກົວຕົວສັ່ນ ເພາະຄວາມດີ
ແລະຄວາມຈະເລີນທຸກຢ່າງ ຊຶ່ງເຮົາໄດ້ຈັດຫາໃຫ້ແກ່ພວກເຂົາ.’
[10]ພຣະຢາເວກ່າວດັ່ງນີ້ວ່າ, ‘ໃນສະຖານທີ່ນີ້ຊຶ່ງພວກເຈົ້າກ່າວວ່າ, “ມັນຈະເປັນທີ່ຖິ້ມຮ້າງ, ສະຖານທີ່ໆ ບໍ່ມີມະນຸດ ຫລືສັດ
ໃນຫົວເມືອງແຫ່ງຢູດາ, ແລະຕາມຖະຫນົນນະຄອນເຢຣູຊາເລັມ ຊຶ່ງຮົກຮ້າງເສຍບໍ່ມີມະນຸດ ຫລືສັດ, ທີ່ນັ້ນຈະໄດ້ຍິນ,[11]ສຽງບັນເທີງ
ແລະສຽງມ່ວນຊື່ນ ສຽງພວກເຈົ້າບ່າວ ແລະສຽງພວກເຈົ້າສາວ, ສຽງບັນດາຄົນເຫລົ່ານັ້ນທີ່ຮ້ອງເພງອີກ
ໃນຂະນະທີ່ພວກເຂົານຳເຄື່ອງບູຊາແຫ່ງການສັນເສີນມາຍັງພຣະວິຫານຂອງພຣະຢາເວ ວ່າ, “ຈົ່ງສັນເສີນພຣະຢາເວຈອມໂຍທາ,
ເພາະພຣະຢາເວຊົງປະເສີດ, ແລະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດ!”
ເພາະເຮົາຈະນຳຄວາມຮຸ່ງເຮືອງທັງຫລາຍຂອງແຜ່ນດິນນັ້ນກັບສູ່ສະພາບເດີມ ທີ່ພວກເຂົາເຄີຍມີມາກ່ອນຫນ້ານັ້ນ,’
ພຣະຢາເວກ່າວດັ່ງນີ້ແຫລະ.
[12]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ‘ໃນສະຖານທີ່ນີ້ຊຶ່ງເປັນທີ່ຮົກຮ້າງ, ບໍ່ມີມະນຸດ ຫລືສັດ—ໃນຫົວເມືອງທັງຫມົດນີ້
ຈະມີທົ່ງຫຍ້າຂຽວອ່ອນອີກຄັ້ງ ທີ່ພວກຜູ້ລ້ຽງແກະຈະໄດ້ພັກອາໄສ ແລະລ້ຽງແກະຂອງຕົນ.[13]ໃນຫົວເມືອງແຖບພູເຂົາ
ໃນຫົວເມືອງແຖບພາກໃຕ້ ໃນແຜ່ນດິນເນເກບ ໃນແຜ່ນດິນແຫ່ງເບັນຢາມິນ ແລະຕາມສະຖານທີ່ຮອບນະຄອນເຢຣູຊາເລັມ
ແລະໃນຫົວເມືອງຕ່າງໆ ຂອງຢູດາ, ຝູງແກະທັງຫລາຍຈະຜ່ານກ້ອງມືຂອງຜູ້ທີ່ນັບພວກມັນອີກຄັ້ງ,’ ພຣະຢາເວກ່າວດັ່ງນີ້ແຫລະ.
[14]‘ເບິ່ງແມ! ວັນເຫລົ່ານັ້ນຈະມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອເຮົາຈະໃຫ້ສິ່ງດີທີ່ເຮົາສັນຍາໄວ້ຕໍ່ເຊື້ອສາຍອິດສະຣາເອນ
ແລະເຊື້ອສາຍຢູດາ.[15]ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ ເຮົາຈະໃຫ້ກະສັດຜູ້ຊອບທຳເກີດມາເພື່ອດາວິດ, ແລະເພິ່ນຈະໃຫ້ຄວາມຍຸດຕິທຳ
ແລະຄວາມຊອບທຳໃຫ້ແກ່ແຜ່ນດິນນັ້ນ.[16]ໃນຄາວນັ້ນ ຢູດາຈະໄດ້ຮັບການຊ່ວຍໃຫ້ລອດພົ້ນ
ແລະນະຄອນເຢຣູຊາເລັມຈະອາໄສຢູ່ຢ່າງປອດໄພຫມັ້ນຄົງ, ເພາະນີ້ເປັນຊື່ຊຶ່ງພວກເຂົາຈະເອີ້ນເມືອງນັ້ນຄື,
“ພຣະຢາເວຊົງເປັນຄວາມຊອບທຳຂອງເຮົາ.’”
[17]ເພາະພຣະຢາເວກ່າວດັ່ງນີ້ວ່າ: ‘ເຊື້ອສາຍຂອງດາວິດຈະບໍ່ເຄີຍຂັດສົນຜູ້ທີ່ຈະປະທັບເທິງພະທີ່ນັ່ງແຫ່ງເຊື້ອສາຍອິດສະຣາເອນ,
[18]ຫລືພວກປະໂລຫິດຄົນເລວີຈະບໍ່ຂັດສົນຜູ້ທີ່ຢູ່ຕໍ່ຫນ້າເຮົາ ເພື່ອຖວາຍເຄື່ອງເຜົາບູຊາ, ແລະເຜົາເຄື່ອງບູຊາພືດຜົນເປັນເມັດ,
ແລະເຮັດການບູຊາຕ່າງເປັນນິດ.’”
[19]ພຣະທັມຂອງພຣະຢາເວມາຍັງເຢເຣມີຢາ, ກ່າວວ່າ,[20]“ພຣະຢາເວກ່າວດັ່ງນີ້ວ່າ: ‘ຖ້າພວກເຈົ້າຫັກພັນທະສັນຍາຂອງເຮົາດ້ວຍວັນ
ແລະຄືນໄດ້ ເພື່ອວ່າ ຈະບໍ່ມີວັນ ຫລືຄືນມາຕາມເວລາກຳນົດທັງຫລາຍຂອງພວກມັນອີກຕໍ່ໄປ,
[21]ແລ້ວເຈົ້າຈຶ່ງຈະສາມາດຫັກຄຳຫມັ້ນສັນຍາຂອງເຮົາຊຶ່ງມີຕໍ່ດາວິດ ຜູ້ຮັບໃຊ້ຂອງເຮົາໄດ້, ເພື່ອວ່າ ເຈົ້າຈະບໍ່ມີລູກຊາຍ
ທີ່ຈະສະເຫວີຍລາດເທິງພະທີ່ນັ່ງຂອງເພິ່ນ, ແລະຫັກຄຳຫມັ້ນສັນຍາຂອງເຮົາ ຊຶ່ງມີຕໍ່ປະໂລຫິດ ເຜົ່າເລວີ, ຜູ້ບົວລະບັດຂອງເຮົາໄດ້.
[22]ດັ່ງທີ່ບໍລິວານຂອງທ້ອງຟ້າບໍ່ສາມາດຈະນັບໄດ້, ແລະເມັດດິນຊາຍທີ່ທະເລກໍຕວງບໍ່ໄດ້ສັນໃດ,
ດັ່ງນັ້ນເຮົາກໍຈະໃຫ້ເຊື້ອສາຍຂອງດາວິດຜູ້ຮັບໃຊ້ຂອງເຮົາ ແລະຄົນເລວີຜູ້ບົວລະບັດເຮົາ ທະວີຫລາຍຂຶ້ນສັນນັ້ນ.'"
[23]ພຣະທັມຂອງພຣະຢາເວມາເຖິງເຢເຣມີຢາ, ກ່າວວ່າ,[24]“ພວກເຈົ້າບໍ່ໄດ້ພິຈາລະນາບໍວ່າ ຊົນຊາດເຫລົ່ານີ້ເວົ້າກັນຢ່າງໃດ
ເມື່ອພວກເຂົາໄດ້ເວົ້າກັນວ່າ, ‘ສອງຕະກູນທີ່ພຣະຢາເວໄດ້ຊົງເລືອກໄວ້ນັ້ນ ບັດນີ້ພຣະອົງໄດ້ຊົງປະຖິ້ມພວກເຂົາເສຍແລ້ວ?’ ດັ່ງນີ້ແຫລະ
ພວກເຂົາໄດ້ຫມິ່ນປະຫມາດປະຊາຊົນຂອງເຮົາ, ກ່າວວ່າ ພວກເຂົາຈຶ່ງບໍ່ເປັນປະຊາຊາດໃນສາຍຕາເຂົາທັງຫລາຍອີກຕໍ່ໄປ.
[25]ເຮົາເອງ, ພຣະຢາເວ, ຊົງກ່າວດັ່ງນີ້ວ່າ, ‘ຖ້າເຮົາບໍ່ໄດ້ສະຖາປະນາຄຳຫມັ້ນສັນຍາຂອງເຮົາກັບວັນແລະຄືນ
ແລະຖ້າເຮົາບໍ່ໄດ້ກຳນົດກົດເກນຕ່າງໆຂອງທ້ອງຟ້າ ແລະແຜ່ນດິນໂລກ,[26]ແລ້ວເຮົາຈຶ່ງຈະປະຖິ້ມເຊື້ອສາຍຂອງຢາໂຄບ ແລະດາວິດ
ຜູ້ຮັບໃຊ້ຂອງເຮົາ ແລະຈະບໍ່ເລືອກຜູ້ຫນຶ່ງຈາກເຊື້ອສາຍຂອງເຂົາໃຫ້ຄອບຄອງເຫນືອເຊື້ອສາຍຂອງອັບຣາຮາມ, ອີຊາກ ແລະຢາໂຄບ.
ເພາະເຮົາຈະໃຫ້ພວກເຂົາກັບສູ່ຄວາມຮຸ່ງເຮືອງຕາມສະພາບເດີມ ແລະຈະສະແດງຄວາມເມດຕາເອັນດູຕໍ່ພວກເຂົາ.’”

## 34

[1]ພຣະທັມຊຶ່ງມາຈາກພຣະຢາເວເຖິງເຢເຣມີຢາ, ເມື່ອເນບູກາດເນັດຊາ ກະສັດແຫ່ງເມືອງບາບີໂລນ ແລະກອງທັບທັງຫມົດຂອງພະອົງ,
ພ້ອມດ້ວຍບັນດາຣາຊະອານາຈັກໃນແຜ່ນດິນໂລກ, ຊຶ່ງຢູ່ໃຕ້ການຄອບຄອງຂອງພະອົງ, ແລະ
ຊົນຊາດທັງຫລາຍທີ່ຕໍ່ສູ້ກັບນະຄອນເຢຣູຊາເລັມ ແລະ ຫົວເມືອງທັງປວງຂອງນະຄອນນັ້ນ, ກ່າວວ່າ,[2]‘ພຣະຢາເວ,
ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ: ຈົ່ງໄປ ແລະເວົ້າກັບເຊເດກີຢາ ກະສັດແຫ່ງຢູດາ ແລະກ່າວແກ່ເພິ່ນວ່າ, “ເບິ່ງແມ,
ເຮົາກຳລັງຈະມອບນະຄອນນີ້ໄວ້ໃນມືກະສັດບາບີໂລນ. ພະອົງຈະເຜົາເສຍດ້ວຍໄຟ.[3]ເຈົ້າຈະບໍ່ລອດພົ້ນໄປຈາກມືຂອງເພິ່ນ ເພາະເຈົ້າຈະຖືກຈັບ
ແລະ ຖືກມອບໄວ້ໃນມືຂອງເພິ່ນ. ຕາຂອງເຈົ້າຈະໄດ້ເຫັນພຣະເນດຂອງກະສັດແຫ່ງບາບີໂລນ; ພຣະອົງຈະລົມໂດຍກົງກັບເຈົ້າ
ຂະນະທີ່ເຈົ້າຈະຕ້ອງໄປຍັງບາບີໂລນ.’

[4]ຂໍຊົງຮັບຟັງພຣະທັມຂອງພຣະຢາເວ, ຂ້າແດ່ເຊເດກີຢາກະສັດແຫ່ງຢູດາ! ພຣະຢາເວກ່າວກ່ຽວກັບພະອົງດັ່ງນີ້ວ່າ, ‘ເຈົ້າຈະບໍ່ຕາຍດ້ວຍດາບ.
[5]ເຈົ້າຈະຕາຍດ້ວຍຄວາມສະຫງົບ. ຕາມທີ່ເຂົາຈະເຜົາເຄື່ອງຫອມເພື່ອສືບບັນພະບູລຸດຂອງເຈົ້າ,
ຄືບັນດາກະສັດທັງຫລາຍຊຶ່ງໄດ້ຢູ່ກ່ອນພວກເຈົ້າສັນໃດ, ເຂົາກໍຈະເຜົາເຄື່ອງຫອມເພື່ອພວກເຈົ້າຢ່າງນັ້ນ.
ພວກເຂົາຈະຮ້ອງຄາງເພື່ອພວກເຈົ້າວ່າ, “ອະນິດຈັງ, ເຈົ້ານາຍຂ້ານ້ອຍ!” ພວກເຂົາຈະຮ້ອງໄຫ້ຄວນຄາງເພື່ອເຈົ້າ. ບັດນີ້
ເຮົາໄດ້ລັ່ນຄຳເວົ້າໄວ້ແລ້ວ—ນີ້ເປັນຄຳປະກາດຂອງພຣະຢາເວ.”
[6]ດັ່ງນັ້ນເຢເຣມີຢາຜູ້ປະກາດພຣະທັມໄດ້ເວົ້າບັນດາພຣະທັມເຫລົ່ານີ້ຕໍ່ເຊເດກີຢາກະສັດແຫ່ງຢູດາໃນນະຄອນເຢຣູຊາເລັມ.
[7]ກອງທັບຂອງກະສັດແຫ່ງບາບີໂລນກຳລັງສູ້ຮົບນະຄອນເຢຣູຊາເລັມ ແລະຫົວເມືອງຕ່າງໆ ຂອງຢູດາທີ່ຍັງເຫລືອຢູ່ຄື: ເມືອງລາກິດ ແລະ
ເມືອງອາເຊກາ. ເມືອງທັງສອງນີ້ທີ່ຍັງເຫລືອຢູ່ເນື່ອງຈາກເປັນເມືອງທີ່ມີກຳແພງປ້ອມ.
[8]ພຣະທັມມາຈາກພຣະຢາເວຍັງເຢເຣມີຢາ ຫລັງຈາກທີ່ກະສັດເຊເດກີຢາໄດ້ຊົງເຮັດຄຳຫມັ້ນສັນຍາກັບບັນດາປະຊາຊົນ
ໃນນະຄອນເຢຣູຊາເລັມວ່າ,
ຈະປະກາດອິດສະຫລະພາບແກ່ພວກເຂົາທັງຫລາຍວ່າ[9]ໃຫ້ທຸກຄົນປ່ອຍຂ້າທາດເຮັບເຣີຂອງຕົນໃຫ້ເປັນອິດສະຫລະ, ທັງຜູ້ຊາຍ
ແລະຜູ້ຍິງເສຍ, ເພື່ອວ່າຈະບໍ່ມີຜູ້ໃດເຮັດໃຫ້ຊາວຢິວເປັນຂ້າທາດ, ຜູ້ຊຶ່ງເປັນພີ່ນ້ອງຂອງຕົນ.
[10]ດັ່ງນັ້ນບັນດາຜູ້ນຳ ແລະບັນດາປະຊາຊົນຜູ້ເຂົ້າຮ່ວມເຮັດຄຳຫມັ້ນສັນຍາໄດ້ຍິນວ່າ ແຕ່ລະຄົນຈະປ່ອຍຂ້າທາດຂອງຕົນທັງຜູ້ຊາຍ ແລະຜູ້ຍິງ
ເພື່ອວ່າພວກເຂົາທັງຫລາຍຈະບໍ່ຖືກເຮັດໃຫ້ເປັນຂ້າທາດອີກໄປ. ພວກເຂົາກໍໄດ້ເຊື່ອຟັງ ແລະປ່ອຍຂ້າທາດໃຫ້ເປັນອິດສະຫລະ.
[11]ແຕ່ພາຍຫລັງຈາກນັ້ນ ພວກເຂົາໄດ້ປ່ຽນໃຈຂອງພວກເຂົາ. ພວກເຂົາໄດ້ຈັບຂ້າທາດ ຊຶ່ງໄດ້ປ່ອຍໃຫ້ເປັນອິດສະຫລະນັ້ນມາ
ໃຫ້ບັງຄັບທາດຜູ້ຊາຍ ແລະຜູ້ຍິງໃຫ້ເປັນທາດອີກ.
[12]ດັ່ງນັ້ນພຣະທັມແຫ່ງພຣະຢາເວຈຶ່ງມາຍັງເຢເຣມີຢາ, ກ່າວວ່າ,[13]“ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ຊົງກ່າວດັ່ງນີ້ວ່າ,
‘ເຮົາໄດ້ເຮັດຄຳຫມັ້ນສັນຍາກັບບັນພະບູລຸດຂອງພວກເຈົ້າ ໃນມື້ທີ່ເຮົານຳພວກເຂົາອອກມາຈາກແຜ່ນດິນເອຢິບ, ອອກຈາກເຮືອນຂ້າທາດ.
ນັ້ນແຫລະທີ່ເຮົາໄດ້ກ່າວວ່າ,[14]“ເມື່ອສິ້ນສຸດເຈັດປີແລ້ວ, ແຕ່ລະຄົນຈະຕ້ອງປ່ອຍພີ່ນ້ອງຊາວເຮັບເຣີ, ຜູ້ທີ່ໄດ້ຖືກຂາຍໄວ້ກັບພວກເຈົ້າ
ແລະໄດ້ຮັບໃຊ້ພວກເຈົ້າມາຫົກປີ ຈົ່ງປ່ອຍເຂົາໃຫ້ເປັນອິດສະຫລະ.” ແຕ່ບັນພະບູລຸດຂອງພວກເຈົ້າບໍ່ຟັງເຮົາ ແລະ
ບໍ່ຫງ່ຽງຫູຂອງພວກເຂົາຕໍ່ຮົາ.
[15]ບັດນີ້ເຈົ້າເອງໄດ້ກັບໃຈ ແລະໄດ້ເລີ່ມຕົ້ນເຮັດສິ່ງຊຶ່ງຖືກຕ້ອງໃນສາຍຕາຂອງເຮົາ. ເຈົ້າໄດ້ປະກາດອິດສະຫລະພາບ
ຂອງແຕ່ລະຄົນແກ່ເພື່ອນບ້ານຂອງຕົນ, ແລະເຈົ້າໄດ້ເຮັດຄຳຫມັ້ນສັນຍາຕໍ່ຫນ້າເຮົາໃນພຣະວິຫານ ຊຶ່ງເອີ້ນຕາມນາມຊື່ຂອງເຮົາ.
[16]ແຕ່ແລ້ວພວກເຈົ້າກໍຫວນກັບ ແລະໄດ້ເຮັດໃຫ້ນາມຂອງເຮົາເປັນມົນທິນ; ເຈົ້າແຕ່ລະຄົນເຮັດໃຫ້ຈັບຂ້າທາດຜູ້ຊາຍ ແລະຜູ້ຍິງຂອງພວກເຈົ້າ,
ພວກທີ່ເຈົ້າໄດ້ປ່ອຍໃຫ້ເປັນອິດສະຫລະໄປຕາມຄວາມປາດຖະຫນາ. ເຈົ້າໄດ້ບັງຄັບພວກເຂົາກັບມາໃຫ້ເປັນທາດອີກຄັ້ງ.’
[17]ເພາະສະນັ້ນ ພຣະຢາເວຈຶ່ງກ່າວດັ່ງນີ້ວ່າ, ‘ພວກເຈົ້າທັງຫລາຍບໍ່ໄດ້ເຊື່ອຟັງເຮົາ. ເຈົ້າຄວນປະກາດອິດສະຫລະພາບ, ພວກເຈົ້າແຕ່ລະຄົນ,
ແກ່ບັນດາພີ່ນ້ອງ ແລະບັນດາເພື່ອນບ້ານອິດສະຣາເອນ. ດັ່ງນັ້ນ ເບິ່ງແມ! ເຮົາກຳລັງປະກາດອິດສະຫລະແກ່ພວກເຈົ້າ—
ນີ້ເປັນຄຳປະກາດຂອງພຣະຢາເວ—ອິດສະຫລະຕໍ່ດາບ, ຕໍ່ພະຍາດລະບາດ, ແລະຕໍ່ການອຶດຫິວອາຫານ,
ເພາະເຮົາກຳລັງຈະເຮັດໃຫ້ພວກເຈົ້າເປັນສິ່ງທີ່ຫນ້າຢ້ານກົວໃນສາຍຕາ ຂອງບັນດາຣາຊະອານາຈັກຂອງແຜ່ນດິນໂລກ.
[18]ແລ້ວເຮົາຈະເຮັດໃຫ້ປະຊາຊົນທີ່ໄດ້ລະເມີດຕໍ່ຄຳຫມັ້ນສັນຍາຂອງເຮົາ, ຜູ້ບໍ່ໄດ້ເຮັດຕາມຂໍ້ຕົກລົງໃນຄຳຫມັ້ນສັນຍາ
ຊຶ່ງພວກເຂົາໄດ້ເຮັດຕໍ່ຫນ້າເຮົານັ້ນ ເປັນດັ່ງລູກງົວທີ່ເຂົາຕັດອອກເປັນສອງທ່ອນ ແລະຍ່າງຜ່ານກາງທ່ອນທັງສອງນັ້ນ,
[19]ແລະພວກເຈົ້ານາຍແຫ່ງຢູດາ ແລະນະຄອນເຢຣູຊາເລັມ, ພວກຊາຍຕອນ ແລະ ພວກປະໂລຫິດ, ແລະບັນດາປະຊາຊົນແຫ່ງແຜ່ນດິນນັ້ນ
ຜູ້ທີ່ໄດ້ຍ່າງຜ່ານລະຫວ່າງທ່ອນລູກງົວຜູ້ນັ້ນ.
[20]ເຮົາຈະມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ ແລະໃນມືຂອງບັນດາຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ.
ສົບຂອງພວກເຂົາຈະເປັນອາຫານຂອງນົກໃນອາກາດ ແລະຂອງສັດໃນແຜ່ນດິນໂລກ.[21]ດັ່ງນັ້ນເຮົາຈະມອບເຊເດກີຢາກະສັດແຫ່ງຢູດາ
ແລະພວກເຈົ້ານາຍທັງຫລາຍຂອງເຂົານັ້ນໄວ້ໃນມືຂອງບັນດາສັດຕູຂອງພວກເຂົາ
ແລະມອບໄວ້ໃນມືຂອງບັນດາຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ,
ແລະມອບໄວ້ໃນມືຂອງກອງທັບແຫ່ງກະສັດບາບີໂລນຊຶ່ງໄດ້ລຸກຂຶ້ນຕໍ່ສູ້ກັບເຈົ້າ.[22]ເບິ່ງແມ, ເຮົາກຳລັງຈະໃຫ້ຄຳບັນຊາ—
ນີ້ເປັນຄຳປະກາດຂອງພຣະຢາເວ—ແລະຈະນຳເຂົາກັບມາຍັງນະຄອນນີ້, ພວກເຂົາຈະສູ້ຮົບກັບເມືອງນັ້ນຍຶດເອົາຈົນໄດ້ ແລະເຜົາເສຍດ້ວຍໄຟ.
ເພາະເຮົາຈະເຮັດໃຫ້ຫົວເມືອງຕ່າງໆຂອງຢູດາເປັນທີ່ຮົກຮ້າງເສຍ ບໍ່ມີຄົນອາໄສ.’”


generated on Tue Jun 17 19:01:42 2025

35 [1]ພຣະທັມຊຶ່ງມາຈາກພຣະຢາເວເຖິງເຢເຣມີຢາ ໃນລາຊະການເຢໂຮຢາກິມລູກຊາຍຂອງໂຢສີຢາກະສັດແຫ່ງຢູດາ, ກ່າວວ່າ,
[2]"ຈົ່ງໄປຫາເຊື້ອສາຍເຣກາບ ແລະເວົ້າກັບພວກເຂົາ ແລ້ວນຳພວກເຂົາມາທີ່ພຣະວິຫານຂອງພຣະຢາເວ
ເຂົ້າມາໃນຫ້ອງລະບຽງຫ້ອງຫນຶ່ງ, ແລະເຊີນໃຫ້ພວກເຂົາດື່ມເຫລົ້າອະງຸ່ນ."

[3]ດັ່ງນັ້ນ ຂ້ານ້ອຍຈຶ່ງນຳຢາອາຊານີຢາລູກຊາຍເຢເຣມີຢາ ຜູ້ເປັນລູກຊາຍຮາບາຊີນີຢາ ແລະພີ່ນ້ອງຂອງລາວ, ແລະລູກຊາຍຂອງລາວທັງຫມົດ,
ແລະເຊື້ອສາຍເຣກາບທັງຫມົດ.[4]ຂ້ານ້ອຍນຳພວກເຂົາມາຍັງພຣະວິຫານຂອງພຣະຢາເວ, ມາໃນຫ້ອງລະບຽງຂອງລູກຊາຍຂອງຮານັນ
ຜູ້ເປັນລູກຊາຍອີກດາລີຢາ, ຄົນຂອງພຣະເຈົ້າ. ຊຶ່ງຢູ່ໃກ້ກັບຫ້ອງຂອງພວກຜູ້ນຳ, ຊຶ່ງຢູ່ເຫນືອຫ້ອງຂອງມາອາເສຢາລູກຊາຍຊານລູມ,
ຜູ້ເບິ່ງແຍງປະຕູ.
[5]ແລ້ວຂ້ານ້ອຍກໍວາງໂຖເຫລົ້າອະງຸ່ນກັບຈອກຫລາຍຫນ່ວຍໄວ້ຕໍ່ຫນ້າບັນດາລູກຊາຍແຫ່ງເຊື້ອສາຍເຣກາບ
ແລະໄດ້ເວົ້າກັບພວກເຂົາທັງຫລາຍວ່າ, "ເຊີນດື່ມເຫລົ້າອະງຸ່ນ."[6]ແຕ່ພວກເຂົາໄດ້ຕອບວ່າ, "ພວກເຮົາຈະບໍ່ດື່ມເຫລົ້າອະງຸ່ນ, ເພາະໂຢນາດາບ,
ລູກຊາຍເຣກາບ, ຜູ້ເປັນບັນພະບູລຸດຂອງພວກເຮົາບັນຊາພວກເຮົາວ່າ, 'ຢ່າດື່ມເຫລົ້າອະງຸ່ນ, ທັງຕົວພວກເຈົ້າ ແລະລູກຫລານຂອງພວກເຈົ້າ,
ເປັນນິດ.[7]ຢ່າສ້າງເຮືອນໃດໆເລີຍ, ຢ່າຫວ່ານເມັດພືດ, ຫລືຢ່າປູກສວນອະງຸ່ນໃດໆເລີຍເຊັ່ນກັນ; ນີ້ບໍ່ແມ່ນສຳລັບພວກເຈົ້າ.
ແຕ່ພວກເຈົ້າຈົ່ງຢູ່ອາໄສໃນເຕັນຕະຫລອດຊີວິດຂອງພວກເຈົ້າ,
ເພື່ອພວກເຈົ້າຈະມີຊີວິດຍືນຍາວໃນແຜ່ນດິນຊຶ່ງພວກເຈົ້າກຳລັງອາໄສຢູ່ໃນຖານະຄົນຕ່າງດ້າວທັງຫລາຍ.'
[8]ພວກເຮົາທັງຫລາຍໄດ້ເຊື່ອຟັງສຽງຂອງໂຢນາດາບລູກຊາຍເຣກາບ, ຜູ້ເປັນບັນພະບູລຸດຂອງພວກເຮົາ,
ໃນສິ່ງທັງປວງຊຶ່ງເພິ່ນໄດ້ບັນຊາພວກເຮົາ, ຄືບໍ່ດື່ມເຫລົ້າອະງຸ່ນຕະຫລອດຊີວິດຂອງເຮົາ, ທັງຕົວເຮົາ, ເມຍ, ລູກຊາຍ, ແລະລູກສາວຂອງເຮົາ.
[9]ພວກເຮົາຈະບໍ່ສ້າງເຮືອນທັງຫລາຍເພື່ອຈະອາໄສຢູ່, ແລະຈະມີສວນອະງຸ່ນ, ຫລືທົ່ງນາ, ຫລືເມັດພືດໃນຄອບຄອງຂອງພວກເຮົາ.
[10]ພວກເຮົາໄດ້ອາໄສຢູ່ໃນເຕັນທັງຫລາຍ ແລະໄດ້ເຊື່ອຟັງ ແລະເຮັດທຸກສິ່ງຊຶ່ງໂຢນາດາບບັນພະບູລຸດຂອງພວກເຮົາໄດ້ບັນຊາເຮົາໄວ້.
[11]ແຕ່ເມື່ອເນບູກາດເນັດຊາ ກະສັດແຫ່ງບາບີໂລນໄດ້ຍົກມາຕໍ່ສູ້ກັບແຜ່ນດິນນີ້, ເຮົາເວົ້າວ່າ, 'ມາແມ, ໃຫ້ເຮົາໄປຍັງນະຄອນເຢຣູຊາເລັມ
ເພື່ອຫລົບຫນີຈາກກອງທັບຄົນເຄນເດຍ ແລະກອງທັບຄົນອາຣາມຽນ.' ດັ່ງນັ້ນເຮົາຈຶ່ງຢູ່ໃນນະຄອນເຢຣູຊາເລັມ."
[12]ແລ້ວພຣະທັມແຫ່ງພຣະຢາເວຈຶ່ງມາເຖິງເຢເຣມີຢາວ່າ,[13]"ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ,
ຈົ່ງໄປແລະບອກບັນດາຜູ້ຊາຍຂອງຢູດາ ແລະບອກຊາວນະຄອນເຢຣູຊາເລັມວ່າ ພຣະຢາເວກ່າວວ່າ, "ພວກເຈົ້າຈະບໍ່ຮັບຄຳສັ່ງສອນ ແລະ
ເຊື່ອຟັງຖ້ອຍຄຳຂອງເຮົາບໍ? —ນີ້ເປັນການປະກາດຂອງພຣະຢາເວ.
[14]ຄຳບັນຊາທັງຫລາຍຊຶ່ງໂຢນາດາບລູກຊາຍເຣກາບໃຫ້ໄວ້ແກ່ລູກຊາຍທັງຫລາຍຂອງຕົນ ເພິ່ນສັ່ງວ່າບໍ່ໃຫ້ດື່ມເຫລົ້າອະງຸ່ນນັ້ນ.
ພວກເຂົາກໍໄດ້ຮັກສາໄວ້ຈົນຮອດທຸກມື້ນີ້. ພວກເຂົາທັງຫລາຍໄດ້ເຊື່ອຟັງຄຳບັນຊາແຫ່ງບັນພະບູລຸດຂອງພວກເຂົາ. ແຕ່ສຳລັບເຮົາ,
ເຮົາເອງໄດ້ເວົ້າກັບພວກເຈົ້າຢ່າງບໍ່ຢຸດຢັ້ງ, ແຕ່ພວກເຈົ້າທັງຫລາຍກໍບໍ່ໄດ້ຟັງເຮົາ.
[15]ເຮົາໄດ້ສົ່ງບັນດາຜູ້ຮັບໃຊ້ຂອງເຮົາ, ຄືຜູ້ປະກາດພຣະທັມມາຫາພວກເຈົ້າ. ເຮົາສົ່ງພວກເຂົາມາຢ່າງບໍ່ຂາດສາຍ ກ່າວວ່າ,
'ໃຫ້ພວກເຈົ້າທຸກຄົນຈົ່ງຖອຍຫລັງກັບຈາກທາງຊົ່ວຂອງຕົນ ແລະເຮັດສິ່ງດີທັງຫລາຍ; ຢ່າໃຫ້ຜູ້ໃດໄປຕິດສອຍຫ້ອຍຕາມພະອື່ນໆ
ແລະນະມັດສະການພະເຫລົ່ານັ້ນ. ແຕ່, ໃຫ້ກັບມາຢູ່ໃນແຜ່ນດິນ ຊຶ່ງເຮົາໄດ້ປະທານແກ່ພວກເຈົ້າ ແລະ ບັນພະບູລຸດທັງຫລາຍຂອງພວກເຈົ້າ.'
ແຕ່ພວກເຈົ້າບໍ່ໄດ້ຫງ່ຽງຫູຟັງ ຫລືສົນໃຈເຮົາເລີຍ.[16]ເພາະເຊື້ອສາຍທັງຫລາຍຂອງໂຢນາດາບລູກຊາຍຂອງເຣກາບໄດ້ເຮັດຕາມຄຳບັນຊາ
ຊຶ່ງບັນພະບູລຸດຂອງເຂົາໄດ້ສັ່ງໄວ້, ແຕ່ຊົນຊາດນີ້ບໍ່ໄດ້ເຊື່ອຟັງເຮົາ.'"
[17]ເຫດສະນັ້ນ ພຣະຢາເວ, ພຣະເຈົ້າຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, 'ເບິ່ງແມ,
ເຮົາຈະນຳຄວາມຮ້າຍທັງຫມົດຊຶ່ງເຮົາປະກາດໄວ້ມາເຫນືອຢູດາ ແລະບັນດາຊາວນະຄອນເຢຣູຊາເລັມ,
ໄພພິບັດທັງຫມົດທີ່ເຮົາໄດ້ເວົ້າກັບພວກເຂົາທັງຫລາຍ ແຕ່ພວກເຈົ້າກໍບໍ່ຟັງ; ເຮົາໄດ້ເອີ້ນພວກເຂົາ, ແຕ່ເຂົາບໍ່ຂານຕອບ.'"
[18]ເຢເຣມີຢາໄດ້ເວົ້າກັບເຊື້ອສາຍເຣກາບວ່າ, "ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ:
ພວກເຈົ້າໄດ້ເຊື່ອຟັງຄຳບັນຊາຂອງໂຢນາດາບ ບັນພະບູລຸດຂອງພວກເຈົ້າ ແລະຖືຮັກສາຂໍ້ບັງຄັບຂອງເພິ່ນທັງຫມົດເຫລົ່ານັ້ນ—
ພວກເຈົ້າໄດ້ເຮັດທຸກຢ່າງທີ່ເພິ່ນບັນຊາພວກເຈົ້າ—[19]ເພາະສະນັ້ນ ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ,
'ຈະມີບາງຄົນສືບເຊື້ອສາຍຈາກໂຢນາດາບລູກຊາຍເຣກາບ ທີ່ຈະບົວລະບັດເຮົາຢູ່ເປັນນິດ.'"


generated on Tue Jun 17 19:01:42 2025

# 36

1ມັນໄດ້ເກີດຂຶ້ນໃນປີທີສີ່ແຫ່ງລາຊະການເຢໂຮຢາກີມ ລາຊະໂອລົດຂອງໂຢສີຢາ ກະສັດຢູດາ, ທີ່ພຣະຢາເວຊົງກ່າວຕໍ່ເຢເຣມີຢາວ່າ,
2“ຈົ່ງນຳເອົາເຈ້ຍມ້ວນຫນຶ່ງມາສຳລັບຕົວເຈົ້າເອງ ແລະໃຫ້ຂຽນຖ້ອຍຄຳທັງຫມົດທີ່ກ່ຽວກັບອິດສະຣາເອນ ແລະຢູດາ, ແລະຊົນຊາດທັງປວງ.
ຈົ່ງເຮັດທຸກສິ່ງທີ່ເຮົາໄດ້ບອກພວກເຈົ້າຕັ້ງແຕ່ຄາວໂຢສີຢາ ເປັນກະສັດຈົນເຖິງທຸກມື້ນີ້.
3ບາງທີເມື່ອປະຊາຊົນຢູດາໄດ້ຍິນເລື່ອງການທຳລາຍທີ່ເຮົາຕັ້ງໃຈຈະນຳມາຍັງພວກເຂົານັ້ນ.
ພວກເຂົາທຸກຄົນອາດຫລີກຫນີຈາກທາງຊົ່ວຮ້າຍເສຍ, ແລ້ວເຮົາກໍຈະໃຫ້ອະໄພບາບ ແລະ ຄວາມຊົ່ວຮ້າຍແກ່ພວກເຂົາ.”

4ແລ້ວເຢເຣມີຢາຈຶ່ງໄດ້ເອີ້ນບາຣຸກລູກຊາຍເນຣີຢາ ແລະບາຣຸກຂຽນທຸກສິ່ງທີ່ພຣະຢາເວຊົງບອກຜ່ານເຢເຣມີຢາລົງໃນເຈ້ຍນັ້ນ.
5ຕໍ່ຈາກນັ້ນເຢເຣມີຢາໄດ້ບອກບາຣຸກວ່າ, “ຂ້ານ້ອຍຢູ່ໃນຄຸກ ແລະ ບໍ່ສາມາດເຂົ້າໄປໃນພຣະວິຫານຂອງພຣະຢາເວ.6ສະນັ້ນ ເຈົ້າຕ້ອງເຂົ້າໄປ
ແລະຈົ່ງອ່ານຫນັງສືມ້ວນ ທີ່ທ່ານໄດ້ຂຽນຕາມຄຳບອກຂອງຂ້ານ້ອຍ. ໃນວັນຂອງການຖືສິນອົດອາຫານ,
ເຈົ້າຈົ່ງອ່ານພຣະທັມຂອງພຣະຢາເວໃຫ້ປະຊາຊົນທັງຫມົດຟັງ, ແລະພ້ອມທັງເມືອງຕ່າງໆຂອງພວກຢູດາ ຜູ້ທີ່ໄດ້ມາຈາກເມືອງຕ່າງໆ
ເພື່ອໃຫ້ພວກເຂົາໄດ້ຍິນທຸກສິ່ງ ທີ່ພຣະຢາເວໄດ້ຊົງບອກຂ້ານ້ອຍ. ຈົ່ງປະກາດພຣະທັມເຫລົ່ານີ້ໃຫ້ພວກເຂົາຟັງ.
7ບາງເທື່ອພວກເຂົາອາດຈະອ້ອນວອນຕໍ່ພຣະຢາເວ. ບາງເທື່ອແຕ່ລະຄົນຈະຫັນຫນີຈາກທາງຊົ່ວຮ້າຍຂອງພວກເຂົາ,
ເນື່ອງດ້ວຍຄວາມໂມໂຫຮ້າຍ ແລະພຣະພິໂລດຊຶ່ງພຣະຢາເວໄດ້ຊົງຂົ່ມຂູ່ປະຊາຊົນນີ້ຮຸນແຮງຫລາຍ.”8ດັ່ງນັ້ນ ບາຣຸກລູກຊາຍເນຣີຢາ
ຈຶ່ງເຮັດຕາມເຢເຣມີຢາບອກ. ຄືລາວໄດ້ອ່ານພຣະຄຳຂອງພຣະຢາເວດ້ວຍສຽງດັງໃນພຣະວິຫານຂອງພຣະຢາເວ.
9ສິ່ງນີ້ກໍໄດ້ເກີດຂຶ້ນໃນເດືອນທີເກົ້າຂອງປີທີຫ້າ ແຫ່ງລາຊະການເຢໂຮຢາກີມລາຊະໂອລົດຂອງໂຢສີຢາ, ກະສັດຂອງຢູດາ,
ຊຶ່ງປະຊາຊົນທັງປວງໄດ້ຢູ່ໃນນະຄອນເຢຣູຊາເລັມ ແລະທີ່ມາຈາກຫົວເມືອງຕ່າງ ຂອງຢູດາ
ໄດ້ຈັດພິທີຖືສິນອົດອາຫານຂຶ້ນເພື່ອຖວາຍພຣະກຽດແດ່ພຣະຢາເວ.10ບາຣຸກໄດ້ອ່ານຖ້ອຍຄຳຂອງເຢເຣມີຢາໃນຫນັງສືມ້ວນ ດ້ວຍສຽງດັງ
ທີ່ພຣະວິຫານຂອງພຣະຢາເວ, ໃນຫ້ອງຂອງເກມາຣີຢາລູກຊາຍຂອງຊາຟານ ຜູ້ເປັນລາຊະເລຂາ ຢູ່ທີ່ພະລາຊະສຳນັກຊັ້ນເທິງ,
ທາງເຂົ້າປະຕູໃຫຍ່ຂອງພຣະວິຫານ. ລາວໄດ້ເຮັດສິ່ງນີ້ເພື່ອໃຫ້ປະຊາຊົນທັງປວງໄດ້ຍິນ.
11ບັດນີ້ເມື່ອມີກາຢາລູກຊາຍຂອງເກມາຣີຢາ ຜູ້ເປັນລູກຊາຍຂອງຊາຟານ ໄດ້ຍິນຖ້ອຍຄຳທັງຫມົດຂອງພຣະຢາເວໃນຫນັງສືມ້ວນແລ້ວ.
12ລາວກໍໄປຍັງພະລາຊະວັງທີ່ຫ້ອງຂອງລາຊະເລຂາ. ເບິ່ງແມ, ພວກເຈົ້ານາຍຫລາຍຫມົດນັ່ງປະຊຸມຢູ່ທີ່ນັ້ນຄື: ເອລີຊາມາ ຜູ້ເປັນລາຊະເລຂາ,
ເດລາຢາ ລູກຊາຍຂອງເຊມາຢາ, ເອນນາທານ ລູກຊາຍຂອງອັກໂບ, ເກມາຣີຢາຊາຟານ, ເຊເດກີຢາ ລູກຊາຍຂອງຮານານີຢາ,
ແລະພວກເຈົ້ານາຍທັງຫມົດ.
13ແລ້ວມີກາຢາກໍໄດ້ລາຍງານຖ້ອຍຄຳທັງຫມົດທີ່ຕົນໄດ້ຍິນໃຫ້ພວກເຂົາຟັງ.
ເມື່ອພວກເຂົາໄດ້ຍິນທີ່ບາຣຸກໄດ້ອ່ານດ້ວຍສຽງດັງເພື່ອໃຫ້ປະຊາຊົນໄດ້ຍິນ.14ດັ່ງນັ້ນພວກເຈົ້ານາຍໄດ້ໃຊ້ເຢຮູດີລູກຊາຍຂອງເນທານີອາ
ລູກຂອງເຊເລມີຢາ ລູກຊາຍກູຊີ, ໄປບອກໃຫ້ບາຣຸກ, “ຈົ່ງນຳເອົາຫນັງສືມ້ວນໃນມືຂອງເຈົ້າ, ທີ່ເຈົ້າໄດ້ອ່ານໃຫ້ປະຊາຊົນຟັງນັ້ນມາ.”
ດັ່ງນັ້ນບາຣຸກລູກຊາຍເນຣີຢາ ຈຶ່ງໄດ້ຖືຫນັງສືມ້ວນໃນມືຂອງລາວ ແລະໄປຫາພວກເຈົ້ານາຍທັງຫມົດ.15ແລ້ວພວກເຈົ້ານາຍໄດ້ເວົ້າກັບບາຣຸກ
ວ່າ, “ເຊີນນັ່ງລົງ ແລະ ອ່ານຫນັງສືມ້ວນນັ້ນໃຫ້ພວກເຮົາຟັງເບິ່ງດູ.” ດັ່ງນັ້ນບາຣຸກຈຶ່ງອ່ານໃຫ້ພວກເຂົາຟັງ.
16ສິ່ງນີ້ໄດ້ເກີດຂຶ້ນເມື່ອພວກເຂົາໄດ້ຍິນຖ້ອຍຄຳທັງຫມົດນັ້ນ, ແຕ່ລະຄົນກໍຫລຽວເບິ່ງຫນ້າກັນດ້ວຍຄວາມຢ້ານ ແລະເວົ້າຕໍ່ບາຣຸກວ່າ,
“ພວກເຮົາຕ້ອງລາຍງານເລື່ອງນີ້ໃຫ້ກະສັດຊົງຊາບຢ່າງແນ່ນອນ.”17ຕໍ່ມາພວກເຈົ້ານາຍໄດ້ຖາມບາຣຸກວ່າ, “ຈົ່ງບອກພວກເຮົາວ່າ
ເຈົ້າຂຽນຖ້ອຍຄຳທັງຫມົດນີ້ໂດຍຂຽນຕາມຄຳບອກຂອງເຢເຣມີຢາບໍ່?”18ບາຣຸກໄດ້ຕອບວ່າ, “ເຢເຣມີຢາໄດ້ບອກຖ້ອຍຄຳເຫລົ່ານີ້ແກ່ຂ້ານ້ອຍ
ຂ້ານ້ອຍຈຶ່ງບັນທຶກໄວ້ໃນເຈ້ຍມ້ວນດ້ວຍນ້ຳມຶກ.”19ແລ້ວພວກເຈົ້ານາຍໄດ້ບອກບາຣຸກວ່າ, “ເຈົ້າກັບເຢເຣມີຢາຕ້ອງໄປລີ້ຢູ່ສາກ່ອນ
ຢ່າໃຫ້ໃຜຮູ້ວ່າພວກເຈົ້າລີ້ຢູ່ທີ່ໃດ”
20ດັ່ງນັ້ນພວກເຈົ້ານາຍໄດ້ມ້ຽນຫນັງສືມ້ວນນັ້ນໄວ້ໃນຫ້ອງຂອງເອລີຊາມາຜູ້ເປັນລາຊະເລຂາ ແລ້ວພວກເຂົາໄດ້ເຂົ້າໄປໃນພະລາຊະສຳນັກ
ແລະພວກເຂົາກໍໄດ້ກາບທູນຖ້ອຍຄຳທັງຫມົດນັ້ນຕໍ່ກະສັດ.21ແລ້ວກະສັດໄດ້ຊົງສັ່ງໃຫ້ເຢຮູດີໄປເອົາຫນັງສືມ້ວນນັ້ນມາ
ລາວຈຶ່ງໄປເອົາມາຈາກຫ້ອງຂອງເອລີຊາມາ ແລ້ວໄດ້ອ່ານຖວາຍກະສັດ ກັບພວກເຈົ້ານາຍທັງຫມົດທີ່ຢືນຢູ່ຂ້າງ.
22ເວລານັ້ນກະສັດກຳລັງປະທັບຢູ່ໃນພະລາຊະວັງ ເປັນລະດູຫນາວໃນເດືອນທີເກົ້າ, ແລະຊົງນັ່ງຜີງໄຟຈາກເຕົາທີ່ລຸກຢູ່ຕໍ່ຫນ້າພະອົງ.
23ສິ່ງນີ້ກໍໄດ້ເກີດຂຶ້ນເມື່ອເຢຮູດີໄດ້ອ່ານສຸດສາມສີ່ຕອນ, ກະສັດກໍຊົງເອົາມີດນ້ອຍຕັດອອກ ແລ້ວໂຍນຖິ້ມໃສ່ໄຟ ຊົງເຮັດດັ່ງນີ້ຈົນຫນັງສືມ້ວນນັ້ນ
ຖືກເຜົາໄຟຫມົດ.24ເຖິງປານນັ້ນກະສັດ ກັບຂ້າລາຊະການຜູ້ໄດ້ຍິນຖ້ອຍຄຳເຫລົ່ານີ້ ກໍບໍ່ໄດ້ຢ້ານກົວ, ຫລືສະແດງອາການເສຍໃຈຢ່າງໃດເລີຍ.
25ເອນນາທານ, ເດລາຢາ, ແລະເກມາຣີຢາໄດ້ທູນຂໍກະສັດບໍ່ໃຫ້ກະສັດເຜົາຫນັງສືມ້ວນ, ແຕ່ພະອົງກໍບໍ່ຊົງຟັງພວກເຂົາ.
26ແລ້ວກະສັດຊົງສັ່ງໃຫ້ພວກເຈົ້າຊາຍເຢຣາເມເອນ, ພ້ອມດ້ວຍເສຣາຢາລູກຊາຍອັດຊະຣີເອນ, ແລະເຊເລມີຢາລູກຊາຍອັບເດເອນ
ໄປຈັບເຢເຣມີຢາຜູ້ປະກາດພຣະທັມ ກັບບາຣຸກສະຫມຽນຂອງເພິ່ນ, ແຕ່ພຣະຢາເວໄດ້ຊົງເຊື່ອງຄົນທັງສອງນີ້ໄວ້.
27ແລ້ວຖ້ອຍຄຳຂອງພຣະຢາເວໄດ້ມາເຖິງເຢເຣມີຢາ ຫລັງຈາກທີ່ກະສັດຊົງເຜົາຫນັງສືມ້ວນ ແລະ
ຖ້ອຍຄຳທັງຫມົດທີ່ບາຣຸກໄດ້ຂຽນຕາມຄຳບອກຂອງເຢເຣມີຢາແລ້ວ, ກ່າວວ່າ,28"ຈົ່ງກັບໄປ,
ເອົາຫນັງສືມ້ວນອີກມ້ວນຫນຶ່ງມາສຳລັບຕົວເຈົ້າເອງ, ແລະຈົ່ງຂຽນຖ້ອຍຄຳທັງຫມົດທີ່ມີຢູ່ໃນຫນັງສືມ້ວນສະບັບກ່ອນນັ້ນໄວ້ອີກ,
ທີ່ກະສັດເຢໂຮຢາກີມໄດ້ຊົງເຜົາໄຟເສຍນັ້ນ.29ແລ້ວເຈົ້າຕ້ອງກ່າວສິ່ງນີ້ກັບ ກະສັດເຢໂຮຢາກີມວ່າ, “ພະອົງໄດ້ເຜົາຫນັງສືມ້ວນ
ແລະໄດ້ຖາມຂ້ານ້ອຍວ່າ “ເປັນຫຍັງຈຶ່ງຂຽນຄຳວ່າ, ‘ກະສັດບາບີໂລນຈະມາທຳລາຍປະເທດນີ້ຢ່າງແນ່ນອນ,
ເພາະພຣະອົງຈະຂ້າມະນຸດແລະສັດໃນແຜ່ນດິນນັ້ນເສຍ?’””
30ເພາະສະນັ້ນແຫລະ ພຣະຢາເວຈຶ່ງກ່າວກ່ຽວກັບເຢໂຮຢາກີມກະສັດແຫ່ງຢູດາວ່າ:
“ຈະບໍ່ໄດ້ເປັນກະສັດຂອງພະອົງທີ່ຈະປະທັບເທິງບັນລັງຂອງດາວິດ. ສຳລັບພະອົງເອງ, ສົບຂອງພະອົງຕາກແດດໄວ້ໃນກາງເວັນ ແລະ
ຕາກນ້ຳຫມອກໃນຕອນກາງຄືນ.31ເພາະພຣະຢາເວຈະລົງໂທດພະອົງ, ແລະເຊື້ອສາຍຂອງພະອົງ, ແລະພວກຂ້າລາຊະການຂອງພະອົງ,

 generated on Tue Jun 17 19:01:42 2025

ຊາວເຢຣູຊາເລັມ, ແລະຊາວຢູດາທັງຫມົດ ພຣະຢາເວຈະນຳໄພພິບັດທັງຫລາຍ ທີ່ເຮົາໄດ້ເຕືອນພວກເຈົ້າ,
ແຕ່ເປັນສິ່ງທີ່ພວກເຈົ້າບໍ່ໄດ້ໃຫ້ຄວາມໃສ່ໃຈ."
32"ດັ່ງນັ້ນເຢເຣມີຢາໄດ້ເອົາເຈ້ຍອີກມ້ວນຫນຶ່ງມອບໃຫ້ບາຣຸກລູກຊາຍຂອງເກມາຣີຢາ ສະຫມຽນຂອງຕົນ.
ບາຣຸກຈຶ່ງໄດ້ຂຽນຕາມຄຳບອກຂອງເຢເຣມີຢາລົງໃສ່ເຈ້ຍມ້ວນນັ້ນ
ຄືຖ້ອຍຄຳທີ່ມີຢູ່ໃນຫນັງສືມ້ວນສະບັບທີ່ກະສັດເຢໂຮຢາກິມເຜົາໄຟນັ້ນທັງຫມົດ. ຍິ່ງໄປກວ່ານັ້ນ,
ເຢເຣມີຢາໄດ້ເພີ່ມຕື່ມຫລາຍຄຳທີ່ຄືກັນລົງດ້ວຍ.


generated on Tue Jun 17 19:01:42 2025

37 [1]ບັດນີ້ ເຊເດກີຢາພະລາຊະໂອລົດຂອງໂຢສີຢາ ເປັນກະສັດແທນເຢໂຮຢາກິນພະລາຊະໂອລົດຂອງເຢໂຮຢາກີມ. ເນບູກາດເນັດຊາ
ກະສັດແຫ່ງບາບີໂລນໄດ້ຊົງແຕ່ງຕັ້ງເຊເດກີຢາເປັນກະສັດຂອງຢູດາ. [2]ແຕ່ເຊເດກີຢາເອງ ພ້ອມທັງຂ້າລາຊະການຂອງເພິ່ນ ແລະ
ປະຊາຊົນທັງຫລາຍ ບໍ່ໄດ້ເຊື່ອຟັງພຣະຄຳທີ່ພຣະຢາເວຊົງປະກາດຜ່ານທາງເຢເຣມີຢາຜູ້ປະກາດພຣະທັມ.

[3]ດັ່ງນັ້ນກະສັດເຊເດກີຢາ, ຊົງໃຊ້ເຢຮູການລູກຊາຍເຊເລມີຢາ, ແລະ ເຊຟານີຢາລູກຊາຍຂອງມາອາເສຢາປະໂລຫິດ
ສົ່ງຂ່າວສານໄປຫາເຢເຣມີຢາຜູ້ປະກາດພຣະທັມ. ພວກເຂົາໄດ້ເວົ້າຕໍ່ເຢເຣມີຢາວ່າ, “ຂໍໃຫ້ອ້ອນວອນໃນນາມຂອງພວກເຮົາ
ຕໍ່ພຣະຢາເວພຣະເຈົ້າຂອງພວກເຮົາແດ່” [4]ຕອນນີ້ເພິ່ນຍັງໄປຫາມາສູ່ກັບປະຊາຊົນໄດ້ຢ່າງເສລີ, ເພາະຍັງບໍ່ທັນຖືກຄຸມຂັງຄຸກ.
[5]ກອງທັບຂອງກະສັດຟາຣາໂອໄດ້ເຄື່ອນອອກຈາກເອຢິບ,
ເມື່ອຊາວເຄຍເດນຜູ້ຊຶ່ງກຳລັງໂຈມຕີນະຄອນເຢຣູຊາເລັມຢູ່ໄດ້ຮູ້ຂ່າວກ່ຽວກັບພວກເຂົາທັງຫລາຍນັ້ນ
ແລະກໍໄດ້ຖອຍທັບໄປຈາກນະຄອນເຢຣູຊາເລັມ.
[6]ແລ້ວພຣະທັມຂອງຢາເວໄດ້ຊົງກ່າວຕໍ່ເຢເຣມີຢາຜູ້ປະກາດພຣະທັມ, ກ່າວວ່າ, [7]“ພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອັນ, ກ່າວວ່າ:
ນີ້ຄືສິ່ງທີ່ເຈົ້າຈະບອກກັບກະສັດຢູດາ, ຜູ້ຊຶ່ງໃຊ້ພວກເຈົ້າມາປຶກສາກັບເຮົານັ້ນວ່າ, ‘ເບິ່ງແມ, ກອງທັບຂອງກະສັດຟາຣາໂອ,
ທີ່ເຄື່ອນອອກມາຊ່ວຍພວກເຈົ້ານັ້ນ. ກຳລັງຈະກັບຄືນເອຢິບ, ບ້ານເມືອງຂອງພວກເຂົາ. [8]ແລ້ວເຄຍເດນຈະກັບມາ. ພວກເຂົາຈະໂຈມຕີເມືອງນີ້,
ແລ້ວຈະຍຶດເອົາເມືອງໄດ້, ແລະ ເຜົາຖິ້ມເສຍ.’
[9]ເຮົາພຣະຢາເວເຕືອນພວກເຈົ້າວ່າ: ຢ່າຫລອກລວງຕົນເອງ ໂດຍຄິດວ່າ, ‘ແນ່ທີ່ດຽວ ເຄຍເດນຈະຖອຍຫນີອອກໄປຈາກພວກເຮົາ’
ເພາະພວກເຂົາທັງ¬ຫລາຍຈະບໍ່ຖອຍອອກໄປ.
[10]ເຖິງແມ່ນພວກເຈົ້າຈະເຮັດໃຫ້ກອງທັບທັງຫມົດຂອງຊາວເຄຍເດນທີ່ກຳລັງຕໍ່ສູ້ກັບພວກເຈົ້າພ່າຍແພ້ໄປ
ຈົນຍັງເຫລືອແຕ່ຄົນທີ່ບາດເຈັບນອນຢູ່ໃນຕູບຜ້າເຕັ້ນເທົ່ານັ້ນ ຄົນເຫລົ່ານີ້ກໍຈະລຸກຂຶ້ນ ແລະເຜົາເມືອງນີ້ຖິ້ມເສຍ.”
[11]ດັ່ງນັ້ນເມື່ອກອງທັບບາເຄຍເດນໄດ້ຖອຍອອກຈາກນະຄອນເຢຣູຊາເລັມໄປ ເພາະວ່າກອງທັບຂອງກະສັດຟາຣາໂອກຳລັງເຂົ້າມາໃກ້,
[12]ແລ້ວເຢເຣມີຢາພວມອອກຈາກນະຄອນເຢຣູຊາເລັມມຸ່ງຫນ້າໄປຍັງດິນແດນເບັນຢາມິນ.
ເພື່ອຮັບເອົາສ່ວນແບ່ງຂອງຕົນຕໍ່ຫນ້າປະຊາຊົນຂອງເພິ່ນ. [13]ຂະນະທີ່ເພິ່ນມາເຖິງປະຕູເບັນຢາມິນ. ກໍມີທະຫານຄົນຫນຶ່ງຊື່ອີຣີຢາ
ລູກຊາຍເຊເລມີຢາ ຜູ້ເປັນລູກຊາຍຂອງຮານານີຢາ ໄດ້ຈັບເຢເຣມີຢາຜູ້ປະກາດພຣະທັມ ແລະໄດ້ເວົ້າຂູ່ວ່າ,
“ເຈົ້າກຳລັງຫນີໄປຫາຊາວເຄນເດນແມ່ນບໍ?”
[14]ເຢເຣມີຢາໄດ້ຕອບວ່າ, “ບໍ່ແມ່ນ. ຂ້ານ້ອຍບໍ່ໄດ້ຫນີໄປຫາຊາວເຄຍເດນ.” ແຕ່ອີຣີຢາບໍ່ເຊື່ອລາວ. ເພິ່ນຈຶ່ງຈັບເຢເຣມີຢາ ແລະ
ໄດ້ນຳເຂົາໄປຫາພວກເຈົ້ານາຍ. [15]ພວກເຈົ້ານາຍກໍຄຽດແຄ້ນເຢເຣມີຢາ. ພວກເຂົາໄດ້ຂ້ຽນຕີເຢເຣມີຢາ ແລະ
ຂັງເຂົາໄວ້ໃນເຮືອນຂອງໂຢນາທານ ຜູ້ເປັນລາຊະເລຂາ ຊຶ່ງພວກເຂົາໄດ້ປ່ຽນໃຫ້ເປັນຄຸກ.
[16]ດັ່ງນັ້ນເຢເຣມີຢາຖືກເຂົາຂັງໄວ້ໃນຫ້ອງໃຕ້ດິນ, ເພິ່ນໄດ້ຢູ່ທີ່ນັ້ນເປັນເວລາຫລາຍວັນ.
[17]ກະສັດເຊເດກີຢາໄດ້ໃຊ້ໃຫ້ຄົນໄປນຳເອົາຕົວມາທີ່ພຣະຣາດຊະວັງ. ໃນວັງຂອງພະອົງເອງ,
ກະສັດໄດ້ຊົງສອບຖາມເຢເຣມີຢາເປັນການສ່ວນຕົວວ່າ, “ມີຖ້ອຍຄຳຫຍັງແດ່ທີ່ພຣະຢາເວຊົງບອກ?” ເຢເຣມີຢາໄດ້ເວົ້າຕອບວ່າ: “ມີຢູ່
ຂ້ານ້ອຍ” ພະອົງຈະຖືກມອບໄວ້ໃນກຳມືຂອງກະສັດບາບີໂລນ.”
[18]ແລ້ວເຢເຣມີຢາໄດ້ທູນກະສັດເຊເດກີຢາອີກວ່າ, “ຂ້ານ້ອຍໄດ້ເຮັດຜິດຫຍັງແດ່ຕໍ່ສູ້ພະອົງ, ຕໍ່ສູ້ຂ້າລາຊະການຂອງພະອົງ,
ຫລືຕໍ່ສູ້ປະຊາຊົນນີ້ບໍ ພະອົງຈຶ່ງໄດ້ຈັບຂ້ານ້ອຍຂັງໄວ້ໃນຄຸກ? [19]ພວກປະກາດພຣະທັມທີ່ໄດ້ບອກພະອົງວ່າ,
ຜູ້ທີ່ບອກວ່າກະສັດບາບີໂລນຈະບໍ່ມາໂຈມຕີພະອົງ ຫລືໂຈມຕີປະເທດນີ້ນັ້ນຢູ່ໃສ? [20]ແຕ່ບັດນີ້ຂ້າແດ່ກະສັດ, ເຈົ້ານາຍຂອງຂ້ານ້ອຍ,
ຂໍພະອົງຊົງຟັງ! ແລະເຮັດຕາມຂ້ານ້ອຍເວົ້ານີ້ທ້ອນ. ຄືຢ່າສົ່ງຂ້ານ້ອຍຄືນໄປເຮືອນຂອງໂຢນາທານ ຜູ້ເປັນລາຊະເລຂາຂອງພະອົງ,
ຢ້ານວ່າຂ້ານ້ອຍຈະຕ້ອງຕາຍຢູ່ທີ່ນັ້ນ.”
[21]ດ້ວຍເຫດນີ້ ກະສັດເຊເດກີຢາ ຈຶ່ງມີຄຳສັ່ງໃຫ້ກັກຂັງເຢເຣມີຢາໄວ້ໃນກາງເດີ່ນພະລາຊະວັງບໍລິເວນທະຫານຮັກສາພະອົງ. ຢູ່ທີ່ນັ້ນ
ເພິ່ນໄດ້ຮັບເຂົ້າຈີ່ມື້ລະກ້ອນຈາກຜູ້ເຮັດເຂົ້າຈີ່, ໄດ້ຮັບທຸກມື້ຈົນວ່າເຂົ້າຈີ່ໃນເມືອງນັ້ນຫມົດໄປ.
ດັ່ງນັ້ນເຢເຣມີຢາໄດ້ຄ້າງຢູ່ໃນບໍລິເວນທະຫານຮັກສາພະອົງ.

 generated on Tue Jun 17 19:01:42 2025

38 [1]ເຊຟາຕີຢາລູກຊາຍມັດຕານ ເກດາລີຢາລູກຊາຍປັດຊູ ຢູການລູກຊາຍເຊເລມີຢາ ແລະປັດຊູລູກຊາຍມັນກີຢາ
ໄດ້ຍິນຖ້ອຍຄຳທີ່ເຢເຣມີຢາບອກປະຊາຊົນຄື. ເຢເຣມີຢາໄດ້ບອກວ່າ,[2]“ພຣະຢາເວຊົງກ່າວວ່າ:
ຜູ້ໃດຢູ່ໃນເມືອງຈະຕ້ອງຕາຍຍ້ອນເສິກສົງຄາມ, ຫລືຍ້ອນການອຶດຢາກ, ແລະໂລກໄພໄຂ້ເຈັບ,
ແຕ່ຖ້າຜູ້ໃດອອກໄປຍອມຈຳນົນຕໍ່ຊາວເຄນເດຍຈະມີຊີວິດ, ລາວຈະພົ້ນໄພມີຊີວິດຢູ່ໄດ້.”[3]ເຢເຣມີຢາໄດ້ບອກພວກເຂົາດ້ວຍວ່າ,
“ພຣະຢາເວຊົງກ່າວວ່າ: ເມືອງນີ້ຈະຖືກມອບໄວ້ໃນມືຂອງກອງທັບຂອງກະສັດບາບີໂລນ ແລະພະອົງຈະຊົງຍຶດໄວ້.”

[4]ດັ່ງນັ້ນ ພວກເຈົ້ານາຍໄດ້ເວົ້າກະສັດວ່າ, “ຄົນຜູ້ນີ້ຈະຕ້ອງຖືກໂທດເຖິງຕາຍ, ເພາະວ່າລາວໄດ້ເຮັດໃຫ້ທະຫານໃນເມືອງນີ້ເສຍກຳລັງໃຈລົງ,
ທັງມືຂອງປະຊາຊົນທັງຫມົດເຫມືອນກັນ. ລາວໄດ້ປະກາດຖ້ອຍຄຳເຫລົ່ານີ້, ເພາະວ່າຄົນຜູ້ນີ້ບໍ່ໄດ້ຄິດຫາຫວັດດີພາບແກ່ຊົນຊາດນີ້,
ແຕ່ຫາຄວາມທຸກຍາກລຳບາກມາໃສ່ພວກເຂົາ.”[5]ແລ້ວກະສັດເຊເດກີຢາຊົງກ່າວວ່າ, “ເບິ່ງແມ, ຜູ້ຊາຍຄົນນີ້ຢູ່ໃນມືຂອງພວກເຈົ້າແລ້ວ
ເພາະບໍ່ມີກະສັດໃດສາມາດຕໍ່ຕ້ານພວກທ່ານໄດ້ດອກ.”
[6]ແລ້ວພວກເຈົ້ານາຍຈຶ່ງຈັບເຢເຣມີຢາ ແລະຜູກເຊືອກຢ່ອນລົງສ້າງຂີ້ຕົມ ມັນກີຢາ, ຂອງພວກເຈົ້າຊາຍ.
ທີ່ເດີ່ນພະລາຊະວັງເຂດຂອງພວກທະຫານຮັກສາພຣະອົງ. ພວກເຂົາໄດ້ຫຍ່ອນເຢເຣມີຢາລົງໄປດ້ວຍເຊືອກ. ໃນທີ່ຂັງນ້ຳນັ້ນບໍ່ມີນ້ຳ ມີແຕ່ຂີ້ຕົມ,
ແລະເຢເຣມີຢາກໍໄດ້ຫລົ່ມລົງໄປໃນຕົມນັ້ນ.
[7]ບັດນີ້ເອເບັດເມເລັກຊາວເອທີໂອເປຍ ທີ່ເຮັດວຽກຢູ່ໃນພະລາຊະວັງ. ເພິ່ນໄດ້ຍິນຂ່າວວ່າພວກເຂົາຈັບເຢເຣມີຢາຢ່ອນລົງໃນສ້າງ.
ລາວກໍອອກຈາກພະລາຊະວັງໄປເວົ້າກະສັດທີ່ກຳລັງປະທັບຢູ່ທີ່ປະຕູເບັນຢາມິນ.[8]ດັ່ງນັ້ນເອເບັດເມເລັກກໍໄດ້ອອກໄປຈາກວັງຂອງກະສັດ ແລະ
ໄດ້ທູນກະສັດ. ເຂົາໄດ້ທູນວ່າ,[9]“ຂ້າແດ່ກະສັດເຈົ້ານາຍຂອງຂ້ານ້ອຍ ຄົນພວກນີ້ໄດ້ເຮັດຊົ່ວຮ້າຍທຸກຢ່າງຕໍ່ເຢເຣມີຢາ
ຄືພວກເຂົາໄດ້ຈັບເພິ່ນຂັງໄວ້ໃນສ້າງ ເພື່ອໃຫ້ເພິ່ນອຶດຕາຍຢູ່ທີ່ນັ້ນ, ເພາະວ່າໃນເມືອງນີ້ບໍ່ມີອາຫານເຫລືອຢູ່ອີກເລີຍ.”
[10]ແລ້ວເມື່ອກະສັດຊົງຊາບດັ່ງນັ້ນ ກໍຊົງສັ່ງໃຫ້ເອເບັດເມເລັກຊາວ ຄູດ. ພະອົງກ່າວວ່າ, “ຈົ່ງນຳເອົາຄົນສາມສິບຄົນຈາກທີ່ນັ້ນ ແລະ
ໄປດຶງເຢເຣມີຢາຂຶ້ນມາຈາກສ້າງກ່ອນທີ່ເພິ່ນຈະຕາຍ.”[11]ດັ່ງນັ້ນ ເອເບັດເມເລັກຈຶ່ງໄດ້ພາຄົນເຫລົ່ານັ້ນໄປຍັງວັງຂອງກະສັດ,
ໄປທີ່ຫ້ອງເກັບເຄື່ອງທີ່ຊັ້ນລຸ່ມຂອງພະລາຊະວັງ. ຈາກນັ້ນເພິ່ນໄດ້ເອົາເສື້ອຜ້າທີ່ຂາດ ແລະເກົ່າ ແລ້ວຢ່ອນລົງ
ດ້ວຍເຊືອກຫລາຍເສັ້ນໃຫ້ເຢເຣມີຢາໃນທີ່ຂັງນ້ຳ.
[12]ເອເບັດເມເລັກບອກເຢເຣມີຢາວ່າ, “ທ່ານຈົ່ງເອົາຜ້າຂາດນີ້ຮອງຂີ້ແຮ້ຂອງທ່ານ ເພື່ອບໍ່ໃຫ້ເຊືອກຂາດ” ດັ່ງນັ້ນ ເຢເຣມີຢາກໍໄດ້ເຮັດຕາມ.
[13]ແລ້ວພວກເຂົາກໍໄດ້ດຶງເຊືອກເອົາເພິ່ນຂຶ້ນມາຈາກສ້າງ ແລະໃຫ້ຢູ່ໃນເດີ່ນພະລາຊະວັງນັ້ນຕໍ່ໄປ.
ດັ່ງນັ້ນເຢເຣມີຢາກໍໄດ້ຄ້າງຢູ່ໃນເດີ່ນທະຫານຮັກສາພະອົງ.
[14]ແລ້ວກະສັດເຊເດກີຢາໄດ້ຊົງຮັບສັ່ງໃຫ້ເອົາເຢເຣມີຢາຜູ້ປະກາດພຣະທັມເຂົ້າເຝົ້າພະອົງ, ຢູ່ທີ່ທາງເຂົ້າວິຫານປ່ອງທີສາມ.
ກະສັດໄດ້ເວົ້າກັບເຢເຣມີຢາວ່າ, “ເຮົາຈະຖາມພວກເຈົ້າຈັກຂໍ້ຫນຶ່ງ ຂໍຢ່າປິດບັງສິ່ງໃດໄວ້ຈາກເຮົາເລີຍ.”[15]ເຢເຣມີຢາໄດ້ເວົ້າວ່າ,
“ຖ້າຂ້ານ້ອຍເວົ້າຄວາມຈິງ, ພະອົງກໍຈະລົງໂທດຂ້ານ້ອຍເຖິງຕາຍ? ແຕ່ຖ້າຖວາຍຄຳປຶກສາ,
ພະອົງກໍຈະບໍ່ຮັບຟັງຂ້ານ້ອຍ.”[16]ແຕ່ກະສັດເຊເດກີຢາຈຶ່ງຊົງສາບານຕໍ່ເຢເຣມີຢາເປັນການລັບວ່າ,
“ພຣະຢາເວຜູ້ຊົງປະທານຊີວິດໃຫ້ເຮົາຊົງພຣະຊົນຢູ່ສັນໃດ, ເຮົາຈະບໍ່ລົງໂທດພວກເຈົ້າເຖິງຕາຍ
ຫລືມອບພວກເຈົ້າໄວ້ໃນກຳມືຂອງຄົນທີ່ຢາກຈະຂ້າເຈົ້າສັນນັ້ນ.”
[17]ດັ່ງນັ້ນເຢເຣມີຢາໄດ້ທູນເຊເດກີຢາວ່າ, “ພຣະຢາເວຜູ້ມີອຳນາດຍິ່ງໃຫຍ່, ພຣະເຈົ້າຂອງອິດສະຣາເອນ, ຊົງກ່າວດັ່ງນີ້:
ຖ້າພະອົງຊົງຍອມອອກໄປຫາພວກເຈົ້ານາຍຂອງກະສັດບາບີໂລນແລ້ວ ຊີວິດຂອງພະອົງຈະຊົງປອດໄພ ແລະເມືອງນີ້ກໍຈະບໍ່ຖືກເຜົາພິນາດ
ພະອົງກັບພະລາຊະວົງຂອງພະອົງຈະມີຊີວິດຢູ່ໄດ້.[18]ແຕ່ຖ້າບໍ່ຊົງຍອມມອບຕົວແກ່ພວກຂ້າຣາຊະການຂອງກະສັດແຫ່ງບາບີໂລນ
ແລ້ວເມືອງນີ້ຈະຕ້ອງຖືກຍຶດເອົາໄວ້ໃນມືຂອງຄົນເຄນເດຍ. ພວກເຂົາຈະເຜົາມັນໃຫ້ພິນາດ
ສ່ວນພະອົງກໍຈະບໍ່ສາມາດຫນີຈາກເງື້ອມມືຂອງພວກເຂົາ.”
[19]ແຕ່ກະສັດເຊເດກີຢາຊົງຕອບວ່າ, “ແຕ່ເຮົາຢ້ານຊາວຢູດາພວກທີ່ລັກຫນີໄປຫາຊາວເຄນເດຍ,
ເພາະວ່າເຮົາອາດຈະຖືກມອບເຮົາໃຫ້ແກ່ຄົນເຫລົ່ານັ້ນ, ເພາະພວກເຂົາກໍຈະທໍລະມານເຮົາ.”
[20]ເຢເຣມີຢາໄດ້ເວົ້າວ່າ, “ພວກເຂົາຈະບໍ່ມອບພະອົງໄວ້ດອກ. ຂໍໃຫ້ພະອົງຊົງເຊື່ອຟັງພຣະດຳລັດຂອງພຣະຢາເວ,
ຕາມທີ່ຂ້ານ້ອຍກຳລັງທູນພະອົງນັ້ນ, ແລ້ວທຸກ ສິ່ງກໍຈະເປັນໄປດ້ວຍດີສຳລັບພະອົງ, ທັງຊີວິດຂອງພະອົງກໍຈະປອດໄພ.[21]ແຕ່ຖ້າບໍ່ຍອມມອບຕົວ,
ພະອົງຈະປະສົບຄວາມລຳບາກ ຕາມນິມິດທີ່ພຣະຢາເວຊົງສະແດງຕໍ່ຂ້ານ້ອຍແລ້ວ.
[22]ເບິ່ງເທາະ! ຜູ້ຍິງທຸກຄົນທີ່ເຫລືອຢູ່ໃນພະລາຊະວັງ, ຂອງກະສັດຢູດາ, ຈະຖືກນຳອອກໄປມອບໃຫ້ພວກເຈົ້ານາຍຂອງກະສັດບາບີໂລນ.
ພວກຜູ້ຍິງເຫລົ່ານີ້ຈະກ່າວໃນຂະນະທີ່ໄປວ່າ, ‘ພະອົງໄດ້ຊົງຖືກຫລອກຫລວງໂດຍສະຫາຍຜູ້ສະຫນິດຂອງພະອົງ;
ພວກເຂົາໄດ້ທຳລາຍພະອົງແລ້ວ. ພະບາດທັງສອງຂອງພະອົງກໍຈົມລົງຂີ້ຕົມ,
ແລະບັນດາພະສະຫາຍກໍຫລີກຫນີຈາກພະອົງໄປ.’[23]ເພາະບັນດາມະເຫສີ ແລະລູກທັງຫລາຍຂອງພະອົງຈະຖືກນຳໄປມອບໃຫ້ຊາວເຄນເດຍ,
ແລະພະອົງເອງກໍຈະບໍ່ລອດພົ້ນໄປຈາກມືຂອງພວກເຂົາ. ພະອົງຈະຖືກກະສັດບາບີໂລນຈັບໄດ້, ແລະເມືອງນີ້ກໍຈະຖືກເຜົາພິນາດ.”
[24]ແລ້ວເຊເດກີຢາຊົງຕອບເຢເຣມີຢາວ່າ, “ຢ່າໃຫ້ຜູ້ໃດຮູ້ຈັກເລື່ອງທີ່ເຈົ້າເວົ້າມານີ້, ແລ້ວເຈົ້າຈະມີຊີວິດ.[25]ຖ້າພວກເຈົ້ານາຍຮູ້ວ່າ
ເຮົາໄດ້ພົບກັບເຈົ້າ, ແລະຖ້າພວກເຂົາຈະມາຫາເຈົ້າກ່າວວ່າ, ‘ຈົ່ງບອກເຮົາມາວ່າເຈົ້າໄດ້ເວົ້າອັນໃດກັບກະສັດ ແລະຢ່າປິດບັງພວກເຮົາເລີຍ,
ບໍ່ດັ່ງນັ້ນພວກເຮົາຈະຂ້າເຈົ້າ.’[26]ແລ້ວຈົ່ງບອກວ່າ, ‘ຂ້ານ້ອຍໄດ້ຂໍຮ້ອງຕໍ່ກະສັດບໍ່ໃຫ້ສົ່ງເຮົາກັບໄປທີ່ເຮືອນຂອງໂຢນາທານ
ເພື່ອໃຫ້ຕາຍເສຍທີ່ນັ້ນ.”
[27]ຕໍ່ມາ ມີພວກເຈົ້ານາຍໄດ້ມາຫາເຢເຣມີຢາ ແລະຖາມເພິ່ນ, ດັ່ງນັ້ນເພິ່ນກໍບອກພວກເຂົາຕາມທີ່ກະສັດຊົງສັ່ງ.
ແລ້ວພວກເຂົາກໍບໍ່ຊັກຖາມຫຍັງອີກຕໍ່ໄປ, ເພາະພວກເຂົາບໍ່ມີໃຜໄດ້ຍິນການສົນທະນາກັນລະຫວ່າງເຢເຣມີຢາ ແລະກະສັດ.
[28]ດັ່ງນັ້ນເຢເຣມີຢາຈຶ່ງຄ້າງຢູ່ໃນເດີ່ນພະລາຊະວັງ ຈົນຮອດມື້ທີ່ນະຄອນເຢຣູຊາເລັມແຕກ.

 generated on Tue Jun 17 19:01:42 2025

# 39

1ໃນປີທີເກົ້າ ແລະ ເດືອນທີສິບແຫ່ງລາຊະການເຊເດກີຢາ ກະສັດຢູດາ, ເນບູກາດເນັດຊາ
ກະສັດບາບີໂລໄດ້ຍົກທັບມາຕີນະຄອນເຢຣູຊາເລັມ ແລະ ໄດ້ລ້ອມໄວ້.2ຕໍ່ມາໃນປີທີສິບເອັດ ແລະເດືອນສີ່ ແຫ່ງລາຊະການເຊເດກີຢາ,
ໃນວັນທີເກົ້າຂອງເດືອນ, ນະຄອນເຢຣູຊາເລັມກໍແຕກ.3ແລ້ວເມື່ອບັນດາພວກເຈົ້ານາຍຊັ້ນຜູ້ໃຫຍ່ຂອງກະສັດບາບີໂລນທັງຫມົດໄດ້ມາ ແລະ
ນັ່ງທີ່ປະຕູກາງເມືອງຄື: ເນກາລຊາເຣັດເຊ, ສຳກາເນໂບ, ແລະສາເສກີມ, ແລະພວກຂ້າຣາຊະການຊັ້ນສູງຄົນອື່ນ.
ເນກາລຊາເຣັດເຊຜູ້ເປັນຜູ້ນຳຂອງພວກເຈົ້ານາຍທັງຫລາຍ ແລະທີ່ເຫລືອທັງຫມົດເປັນພວກຂ້າຣາຊະການຂອງກກະສັດແຫ່ງບາບີໂລນ.

4ສິ່ງເຫລົ່ານີ້ເກີດຂຶ້ນເມື່ອເຊເດກີຢາ, ກະສັດຂອງຢູດາ, ແລະທະຫານທັງຫມົດຂອງພະອົງໄດ້ເຫັນເຫດການດັ່ງນີ້, ກໍພາກັນຫນີອອກ.
ພວກເຂົາໄດ້ອອກຈາກເມືອງໃນເວລາກາງຄືນທາງພະລາຊະອຸທະຍານ, ອອກຜ່ານໄປທາງປະຕູລະຫວ່າງກຳແພງທັງສອງ.
ກະສັດໄດ້ມຸ່ງຫນ້າໄປຍັງ ອາຣາບາ.5ແຕ່ກອງທັບຂອງຄົນເຄນເດຍໄດ້ໄລ່ຕິດຕາມທັນ
ແລະໄດ້ຈັບເຊເດກີຢາຢູ່ໃນທົ່ງພຽງຂອງແມ່ນ້ຳຈໍແດນໃກ້ເມືອງເຢຣີໂກ. ແລ້ວພວກເຂົາໄດ້ຈັບພະອົງໄວ້
ແລະນຳເອົາໄປມອບໃຫ້ກະສັດເນບູກາດເນັດຊາ, ທີ່ເມືອງຣິບລາໃນດິນແດນຮຳມາດ, ຢູ່ທີ່ນັ້ນກະສັດເນບູກາດເນັດຊາໄດ້ລົງໂທດພະອົງ.
6ກະສັດແຫ່ງບາບີໂລນໄດ້ຕັດສິນປະຫານຊີວິດພວກລູກຊາຍຂອງເຊເດກີຢາ ຕໍ່ຫນ້າຕໍ່ຕາເຊເດກີຢາເອງຢູ່ທີ່ເມືອງຣິບລາ.
ພະອົງໄດ້ຕັດສິນປະຫານຊີວິດພວກເຈົ້ານາຍຂອງຢູດາດ້ວຍ.7ແລ້ວພະອົງຊົງຄວັດຫນ່ວຍຕາຂອງເຊເດກີຢາອອກ
ແລະເອົາໂສ້ທອງແດງຜູກເພິ່ນໄວ້ ເພື່ອຈະນຳໄປນະຄອນບາບີໂລນ.
8ແລ້ວທະຫານຊາວເຄນເດຍໄດ້ເຜົາພະລາຊະວັງ ແລະ ບ້ານເຮືອນຂອງປະຊາຊົນ ພວກເຂົາໄດ້ທຳລາຍກຳແພງນະຄອນເຢຣູຊາເລັມຖິ້ມ.
9ແລ້ວເນບູຊາຣາດານ ຜູ້ບັນຊາການທະຫານຮັກສາພະອົງ ໄດ້ຈັບປະຊາຊົນທີ່ເຫລືອຢູ່ໃນເມືອງເປັນຊະເລີຍ
ນີ້ຮ່ວມທັງຄົນທີ່ຫນີເຂົ້າມາມອບຕົວຕໍ່ຄົນເຄນເດຍ ແລະ ປະຊາຊົນທີ່ເຫລືອຢູ່ທີ່ຄົງຄ້າງຢູ່ໃນເມືອງ.
10ແຕ່ເນບູຊາຣາດານບັນຊາການທະຫານຮັກສາພະອົງ ໄດ້ປະແຕ່ຄົນທຸກຍາກທີ່ສຸດ ທີ່ບໍ່ມີໄຮ່ນາໄວ້ໃນປະເທດຢູດາ.
ເພິ່ນໄດ້ມອບສວນອະງຸ່ນແລະໄຮ່ນາໃຫ້ພວກເຂົາໃນວັນດຽວກັນນັ້ນ.
11ເນບູກາດເນັດຊາກະສັດແຫ່ງບາບີໂລນ ໄດ້ຊົງບັນຊາກ່ຽວກັບເຢເຣມີຢາ ໃຫ້ເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ. ໄດ້ກ່າວວ່າ,
12“ຈົ່ງແຕ່ງຄົນໄປຮັບເອົາຕົວລາວມາ ແລະ ເບິ່ງແຍງລາວໃຫ້ດີ. ຢ່າທຳຮ້າຍລາວ. ແຕ່ຈົ່ງຊ່ວຍລາວຕາມທີ່ລາວຕ້ອງການ.”13ດັ່ງນັ້ນ
ເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ, ພ້ອມດ້ວຍພວກເຈົ້ານາຍຊັ້ນຜູ້ໃຫຍ່ສອງຄົນ, ຄືເນບູຊັດບານ ແລະ ເນກາລຊາເຣັດເຊ
ແລະພວກເຈົ້ານາຍທີ່ສຳຄັນທີ່ສຸດຂອງບາບີໂລນ ໄດ້ສົ່ງພວກເຂົາອອກໄປ.
14ພວກເຂົາຈຶ່ງໃຊ້ຄົນໄປຮັບເອົາເຢເຣມີຢາມາຈາກເດີ່ນພະລາຊະວັງເຂດທະຫານຮັກສາພະອົງ
ພວກເຈົ້ານາຍໄດ້ມອບເຢເຣມີຢາໄວ້ໃຕ້ການເບິ່ງແຍງຂອງເກດາລີຢາລູກຊາຍອາຮີການ ຜູ້ເປັນລູກຊາຍຂອງຊາຟານ, ໃຫ້ນຳເຂົາໄປບ້ານ,
ດ້ວຍເຫດນີ້ ເຢເຣມີຢາຈຶ່ງໄດ້ຢູ່ນຳປະຊາຊົນ.
15ບັດນີ້ພຣະທັມຂອງພຣະຢາເວມາຍັງເຢເຣມີຢາ ຂະນະທີ່ເພິ່ນຖືກຂັງຢູ່ໃນບໍລິເວນທະຫານຮັກສາພະອົງ, ກ່າວວ່າ,
16“ຈົ່ງໄປບອກເອເບັດເມເລັກຄົນເອທີໂອເປຍວ່າ, ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ: ເບິ່ງແມ,
ເຮົາຈະໃຫ້ຖ້ອຍຄຳຂອງເຮົາທີ່ມີຢູ່ຕໍ່ນະຄອນນີ້ສຳເລັດໃນທາງຮ້າຍ ບໍ່ແມ່ນທາງດີ ແລະ ຈະສຳເລັດຕໍ່ຫນ້າພວກເຈົ້າໃນມື້ນັ້ນ.
17ແຕ່ເຮົາຈະຊ່ວຍກູ້ພວກເຈົ້າໃຫ້ພົ້ນໃນມື້ນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—
ແລະເຂົາຈະບໍ່ມອບພວກເຈົ້າໄວ້ໃນມືຂອງຄົນທີ່ພວກເຈົ້າຢ້ານກົວ.18ເພາະເຮົາຈະຊ່ວຍພວກເຈົ້າໃຫ້ພົ້ນແນ່ນອນ.
ພວກເຈົ້າຈະບໍ່ລົ້ມລົງດ້ວຍດາບ, ເຈົ້າຈະມີຊີວິດລອດ ເພາະເຈົ້າໄດ້ໄວ້ວາງໃຈໃນເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ.’”


generated on Tue Jun 17 19:01:42 2025

40 [1]ພຣະທັມຊຶ່ງມາຈາກພຣະຢາເວເຖິງເຢເຣມີຢາ ຫລັງຈາກທີ່ເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງໄດ້ປ່ອຍເພິ່ນທີ່ຣາມາ.
ເມື່ອລາວຈັບເພິ່ນໃສ່ໂສ້ມາພ້ອມກັບບັນດາຊະເລີຍຈາກນະຄອນເຢຣູຊາເລັມ ແລະ ຢູດາ ຜູ້ທີ່ຖືກກວາດໄປເປັນຊະເລີຍຍັງບາບີໂລນ.
[2]ຜູ້ບັນຊາການທະຫານຮັກສາພະອົງ ໄດ້ນຳເຢເຣມີຢາມາ ແລະເວົ້າກັບເພິ່ນວ່າ,
“ພຣະຢາເວພຣະເຈົ້າຂອງທ່ານຊົງປະກາດຄວາມຮ້າຍນີ້ຕໍ່ສະຖານທີ່ນີ້.

[3]ດັ່ງນັ້ນພຣະຢາເວຊົງເຮັດໃຫ້ເປັນໄປ. ພຣະອົງຊົງກະທຳຕາມທີ່ພຣະອົງກ່າວໄວ້ແລ້ວ, ເນື່ອງຈາກພວກທ່ານທັງຫລາຍໄດ້ເຮັດບາບຕໍ່ພຣະຢາເວ
ແລະບໍ່ເຊື່ອຟັງພຣະສຸລະສຽງຂອງພຣະອົງ ສິ່ງນີ້ຈຶ່ງໄດ້ເປັນມາເຫນືອພວກທ່ານ.[4]ເບິ່ງແມ, ມື້ນີ້ຂ້ານ້ອຍປ່ອຍທ່ານຈາກໂສ້ທີ່ມືຂອງທ່ານ.
ແຕ່ຖ້າທ່ານຍິນດີທີ່ຈະມາຍັງນະຄອນບາບີໂລນກັບຂ້ານ້ອຍ, ກໍຈົ່ງມາເຖີດ, ຂ້ານ້ອຍຈະເບິ່ງແຍງທ່ານໃຫ້ດີ.
ແຕ່ຖ້າທ່ານບໍ່ເຫັນພ້ອມທີ່ຈະມາຍັງນະຄອນບາບີໂລນກັບຂ້ານ້ອຍ, ກໍຢ່າມາ. ເບິ່ງແມ, ແຜ່ນດິນທັງຫມົດນີ້ຢູ່ຕໍ່ຫນ້າທ່ານ,
ທ່ານຈະໄປທີ່ໃດກໍໄດ້ຕາມແຕ່ທ່ານເຫັນດີເຫັນງາມທີ່ຈະໄປ.”
[5]ຂະນະເມື່ອເຢເຣມີຢາຍັງບໍ່ໄປເທື່ອ, ເນບູຊາຣາດານໄດ້ກ່າວວ່າ, “ຈົ່ງກັບໄປຫາເກດາລີຢາລູກຊາຍອາຮີການ, ຜູ້ເປັນລູກຊາຍຊາຟານ
ຜູ້ຊຶ່ງກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງໃຫ້ເປັນຜູ້ຮັບຜິດຊອບບັນດາຫົວເມືອງຕ່າງໆ ຂອງຢູດາ. ຈົ່ງຢູ່ກັບລາວທ່າມກາງປະຊາຊົນ ຫລື
ຈະໄປບ່ອນໃດທີ່ທ່ານເຫັນດີຈະໄປກໍໄດ້.” ຜູ້ບັນຊາການທະຫານຮັກສາພະອົງຈຶ່ງສັ່ງອະນຸມັດສະບຽງ, ແລະໃຫ້ຂອງຂວັນແກ່ເຢເຣມີຢາ
ແລ້ວກໍປ່ອຍເພິ່ນໄປ.[6]ດັ່ງນັ້ນເຢເຣມີຢາກໍໄປຫາເກດາລີຢາ ລູກຊາຍອາຮີການ, ທີ່ມິດຊະປາ. ເພິ່ນໄດ້ອາໄສຢູ່ກັບລາວທ່າມກາງປະຊາຊົນ
ຊຶ່ງເຫລືອຢູ່ໃນແຜ່ນດິນນັ້ນ.
[7]ເມື່ອບັນດາຫົວຫນ້າຂອງກອງທະຫານໃນທົ່ງນາຄື—ພວກເຂົາ ແລະຄົນຂອງພວກເຂົາ—
ໄດ້ຍິນວ່າກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງເກດາລີຢາລູກຊາຍອາຮີການໃຫ້ເປັນຜູ້ວ່າລາຊະການໃນແຜ່ນດິນນັ້ນ. ພວກເຂົາໄດ້ມອບຊາຍ, ຍິງ,
ແລະພວກເດັກນ້ອຍໆ ຜູ້ທີ່ເປັນຄົນຈົນທີ່ສຸດໃນແຜ່ນດິນ, ຊຶ່ງບໍ່ໄດ້ຖືກກວາດໄປເປັນຊະເລີຍຍັງບາບີໂລນ.[8]ດັ່ງນັ້ນພວກເຂົາກໍໄປຫາເກດາລີຢາ
ທີ່ມິດຊະປາ. ຄົນເຫລົ່ານີ້ໄດ້ແກ່ ອິດຊະມາເອນ ລູກຊາຍເນທານີອາ; ໂຢຮານານ ແລະໂຢນາທານ, ລູກຊາຍກາເຣອາ; ເສຣາຢາ,
ລູກຊາຍຕັນຮູເມັດ ບັນດາລູກຊາຍຂອງເອຟາຍຊາວເນໂຕຟາ ເຢຊານີຢາລູກຊາຍຊາວມາອາກາ—ທັງພວກເຂົາ ແລະ ຄົນຂອງເຂົາ.
[9]ເກດາລີຢາລູກຊາຍຂອງອາຮີການ ລູກຊາຍຂອງຊາຟານ ກໍໄດ້ປະຕິຍານໃຫ້ແກ່ພວກເຂົາ ແລະ ຄົນຂອງເຂົາ, ກ່າວວ່າ,
“ຢ່າຢ້ານກົວທີ່ຈະບົວລະບັດຄົນບາບີໂລນ. ຈົ່ງອາໄສຢູ່ໃນແຜ່ນດິນ ແລະບົວລະບັດກະສັດແຫ່ງບາບີໂລນ,
ແລ້ວທ່ານທັງຫລາຍກໍຈະຢູ່ເຢັນເປັນສຸກ.[10]ເບິ່ງແມ, ຂ້ານ້ອຍກຳລັງອາໄສຢູ່ທີ່ມິດຊະປາ ເພື່ອຈະບົວລະບັດຄົນເຄນເດຍ
ຜູ້ຊຶ່ງຈະມາຫາພວກເຮົາ. ດັ່ງນັ້ນຈົ່ງເກັບນ້ຳອະງຸ່ນ, ຫມາກໄມ້ລະດູຮ້ອນ, ແລະນ້ຳມັນ ແລະເກັບໄວ້ໃນພາຊະນະຕ່າງໆ.
ຈົ່ງຢູ່ໃນເມືອງທັງຫລາຍຊຶ່ງທ່ານໄດ້ຍຶດຄອງຢູ່ນັ້ນ.”
[11]ແລ້ວຄົນຢູດາທັງຫມົດ ຊຶ່ງຢູ່ທີ່ໂມອາບ, ທ່າມກາງຄົນອຳໂມນ, ແລະ ໃນເອໂດມ,
ແລະໃນແຜ່ນດິນອື່ນທັງຫມົດໄດ້ຍິນວ່າກະສັດແຫ່ງບາບີໂລນໄດ້ຖິ້ມຄົນໃຫ້ເຫລືອໄວ້ສ່ວນຫນຶ່ງໃນຢູດາ,
ແລະໄດ້ແຕ່ງຕັ້ງໃຫ້ເກດາລີຢາລູກຊາຍອາຮີການ ຜູ້ເປັນລູກຊາຍຊາຟານໃຫ້ເປັນຜູ້ວ່າລາຊະການເຫນືອພວກເຂົາ.
[12]ແລ້ວພວກຊາວຢິວທັງປວງກໍໄດ້ກັບມາຈາກທຸກທີ່ຊຶ່ງພວກເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ. ພວກເຂົາໄດ້ກັບມາຍັງແຜ່ນດິນຢູດາ, ມາຫາເກດາລີຢາ
ທີ່ມິດຊະປາ. ພວກເຂົາທັງຫລາຍໄດ້ເກັບນ້ຳອະງຸ່ນ ແລະຫມາກໄມ້ໃນລະດູຮ້ອນໄດ້ເປັນຈຳນວນຫລາຍ.
[13]ຝ່າຍໂຢຮານານລູກຊາຍຂອງກາເຣອາ
ແລະບັນດາຫົວຫນ້າຂອງກອງທະຫານໃນທົ່ງນາໄດ້ມາຫາເກດາລີຢາທີ່ມິດຊະປາ[14]ພວກເຂົາໄດ້ກ່າວແກ່ລາວວ່າ, “ທ່ານຮູ້ຫລືບໍ່ວ່າ ບາອາລິດ
ກະສັດຂອງຄົນອຳໂມນໄດ້ສົ່ງໃຫ້ອິດຊະມາເອນລູກຊາຍເນທານີອາມາເອົາຊີວິດຂອງທ່ານ?” ແຕ່ເກດາລີຢາລູກຊາຍອາຮີການບໍ່ເຊື່ອພວກເຂົາ.
[15]ດັ່ງນັ້ນໂຢຮານານລູກຊາຍກາເຣອາໄດ້ເວົ້າກັບເກດາລີຢາເປັນການລັບ ທີ່ມິດຊະປາວ່າ,
“ຈົ່ງໃຫ້ຂ້ານ້ອຍໄປຂ້າອິດຊະມາເອນລູກຊາຍເນທານີອາເສຍ. ຈະບໍ່ມີໃຜສົງໃສຂ້ານ້ອຍ. ເປັນຫຍັງຈະໃຫ້ລາວເອົາຊີວິດຂອງທ່ານ?
ເປັນຫຍັງຈຶ່ງອະນຸຍາດຄົນຢູດາທັງຫມົດທີ່ໄດ້ມາຮ່ວມກັນຢູ່ກັບທ່ານແລ້ວຈະກະຈັດກະຈາຍກັນໄປ
ແລະທີ່ເຫລືອຢູ່ນີ້ກໍຈະພິນາດ?”[16]ແຕ່ເກດາລີຢາລູກຊາຍອາຮີການເວົ້າກັບໂຢຮານານລູກຊາຍກາເຣອາວ່າ, “ຢ່າເຮັດສິ່ງນີ້ເລີຍ,
ເພາະທີ່ທ່ານເວົ້າເຖິງອິດຊະມາເອນນັ້ນເປັນຄວາມບໍ່ຈິງ.”

 generated on Tue Jun 17 19:01:42 2025

# 41

1ແຕ່ມີເຫດການທີ່ໄດ້ເກີດຂຶ້ນໃນເດືອນທີເຈັດ ອິດຊະມາເອນລູກຊາຍເນທານີອາ, ຜູ້ເປັນລູກຊາຍເອລີຊາມາເຊື້ອພະວົງ,
ແລະພວກເຈົ້ານາຍສິບຄົນຂອງກະສັດ ໄດ້ມາຫາເກດາລີຢາລູກຊາຍອາຮີການ ທີ່ມິດຊະປາ. ພວກເຂົາຮັບປະທານອາຫານຢູ່ນຳກັນ
ທີ່ມິດຊະປາ. 2ແຕ່ອິດຊະມາເອນລູກຊາຍເນທານີອາ ກັບຄົນທັງສິບທີ່ຢູ່ກັບລາວກໍໄດ້ລຸກຂຶ້ນຂ້າເກດາລີຢາລູກຊາຍອາຮີການ
ຜູ້ເປັນລູກຊາຍຊາຟານ, ດ້ວຍດາບ. ອິດຊະມາເອນໄດ້ຂ້າເກດາລີຢາຜູ້ທີ່ກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງໃຫ້ເປັນຜູ້ວ່າລາຊະການທີ່ແຜ່ນດິນ.
3ອິດຊະມາເອນໄດ້ຂ້າຊາວຢິວທັງຫລາຍທີ່ຢູ່ກັບເກດາລີຢາ ທີ່ມິດຊະປາ ແລະພວກທະຫານຊາວເຄນເດຍຊຶ່ງໄດ້ພົບຢູ່ບ່ອນນັ້ນ.

4ຕໍ່ມາອີກສອງມື້ຫລັງຈາກມື້ທີ່ເກດາລີຢາຖືກຂ້າ, ແຕ່ບໍ່ມີໃຜຮູ້ເລື່ອງ. 5ມີບາງຄົນທີ່ໄດ້ມາຈາກເມືອງເຊເຄັມ, ຈາກເມືອງຊີໂລ, ແລະ
ເມືອງຊາມາເຣຍ—ມີຊາຍປະມານແປດສິບຄົນທີ່ໄດ້ໂກນຫນວດເຄົາ, ໄດ້ຈີກເສື້ອຜ້າຂອງພວກເຂົາຂາດ, ແລະປາດຕົວເອງ—
ພ້ອມກັບນຳເຄື່ອງບູຊາພືດຜົນເປັນເມັດ ແລະ ກຳຍານໃນມືຂອງພວກເຂົາ ເພື່ອມາຖວາຍທີ່ພຣະວິຫານຂອງພຣະຢາເວ.
6ດັ່ງນັ້ນ ອິດຊະມາເອນລູກຊາຍເນທນີອາມາຈາກມິດຊະປາ ໄດ້ພົບພວກເຂົາ ຂະນະທີ່ຄົນເຫລົ່ານັ້ນໄປ, ຍ່າງມາທັງຮ້ອງໄຫ້
ແລ້ວເຫດການເຫລົ່ານີ້ກໍເກີດຂຶ້ນເມື່ອເຂົາໄດ້ພົບກັບຄົນເຫລົ່ານັ້ນ ພວກເຂົາທັງກ່າວວ່າ,
“ເຊີນເຂົ້າມາຫາເກດາລີຢາລູກຊາຍອາຮີການເຖີດ.” 7ຕໍ່ມາເມື່ອພວກເຂົາເຂົ້າມາໃນເມືອງນັ້ນ, ອິດຊະມາເອນລູກຊາຍເນທານີອາ
ທັງຄົນທີ່ຢູ່ກັບລາວກໍໄດ້ຂ້າພວກເຂົາ, ແລະໂຍນລົງໄປໃນບ່ອນຂັງນ້ຳ.
8ແຕ່ໃນພວກນັ້ນມີຢູ່ສິບຄົນນຳກັນທີ່ເວົ້າກັບອິດຊະມາເອນວ່າ, “ຂໍຢ່າຂ້າເຮົາເລີຍ ເພາະເຮົາມີເຄື່ອງມີຄ່າຄື: ເຂົ້າວີດ ແລະ ເຂົ້າບາເລ, ນ້ຳມັນ
ແລະນ້ຳເຜີ້ງ ເຊື່ອງໄວ້ໃນທົ່ງນາ.” ດັ່ງນັ້ນ ລາວຈຶ່ງງົດບໍ່ຂ້າພວກເຂົາກັບພີ່ນ້ອງຂອງພວກເຂົາ.
9ບ່ອນຂັງນ້ຳຊຶ່ງອິດຊະມາເອນໂຍນສົບທັງຫລາຍຂອງຜູ້ທີ່ລາວຂ້າຕາຍລົງໄປນັ້ນ, ເປັນຂຸມຂະຫນາດໃຫຍ່ຫລາຍ ຊຶ່ງເປັນບ່ອນທີ່ກະສັດອາຊາ
ໄດ້ສ້າງໄວ້ເພື່ອປ້ອງກັນບາອາຊາກະສັດແຫ່ງອິດສະຣາເອນ. ອິດຊະມາເອນລູກຊາຍເນທານີອາກໍໃສ່ຄົນທີ່ຖືກຂ້າໄວ້ຈົນເຕັມ.
10ຕໍ່ມາ ອິດຊະມາເອນກໍໄດ້ຈັບປະຊາຊົນທັງຫມົດທີ່ເຫລືອຢູ່ໃນມິດຊະປາໄປເປັນຊະເລີຍ ຄືພວກລາຊະທິດາຂອງກະສັດ
ແລະປະຊາຊົນທັງປວງທີ່ເຫລືອຢູ່ໃນມິດຊະປາ, ຜູ້ທີ່ເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ
ໄດ້ມອບຫມາຍໃຫ້ແກ່ເກດາລີຢາລູກຊາຍອາຮີການ. ດັ່ງນັ້ນ ອິດຊະມາເອນລູກຊາຍເນທານີອາໄດ້ຈັບພວກເຂົາເປັນຊະເລີຍ
ແລະຂ້າມຟາກໄປຫາຄົນອຳໂມນ.
11ແຕ່ເມື່ອໂຢຮານານລູກຊາຍກາເຣອາ ແລະບັນດາຫົວຫນ້າຂອງກອງທະຫານຊຶ່ງຢູ່ກັບລາວ ໄດ້ຍິນເລື່ອງຄວາມຊົ່ວຮ້າຍທັງຫລາຍ
ຊຶ່ງອິດຊະມາເອນລູກຊາຍເນທານີອາໄດ້ເຮັດນັ້ນ. 12ພວກເຂົາກໍຈັດເອົາຄົນທັງຫມົດຂອງຕົນໄປ ແລະ
ໄດ້ຕໍ່ສູ້ກັບອິດຊະມາເອນລູກຊາຍເນທານີອາ. ພວກເຂົາປະທະລາວທີ່ສະໃຫຍ່ຊຶ່ງຢູ່ເມືອງກິເບໂອນ.
13ແລ້ວເຫດການທີ່ເກີດຂຶ້ນເມື່ອປະຊາຊົນທັງປວງຜູ້ຊຶ່ງຢູ່ກັບອິດຊະມາເອນເຫັນໂຢຮານານລູກຊາຍກາເຣອາ
ແລະບັນດາຫົວຫນ້າກອງທະຫານທີ່ຢູ່ກັບລາວ, ພວກເຂົາກໍປິຕິຍິນດີ. 14ດັ່ງນັ້ນປະຊາຊົນທັງປວງຊຶ່ງອິດຊະມາເອນຈັບເປັນຊະເລີຍຈາກມິດຊະປາ
ຈຶ່ງຫັນຫລັງ ແລະກັບໄປ ພວກເຂົາໄປຫາໂຢຮານານລູກຊາຍກາເຣອາ.
15ແຕ່ອິດຊະມາເອນລູກຊາຍເນທານີອາໄດ້ຫນີລອດພົ້ນຈາກໂຢຮານານ ພ້ອມກັບຊາຍແປດຄົນ. ເຂົາໄດ້ໄປຫາຄົນອຳໂມນ.
16ແລ້ວໂຢຮານານລູກຊາຍກາເຣອາ ແລະບັນດາຫົວຫນ້າຂອງກອງທະຫານຊຶ່ງຢູ່ກັບລາວ ໄດ້ນຳປະຊາຊົນທີ່ເຫລືອຢູ່ທັງຫມົດຈາກມິດຊະປາ
ພວກຄົນທີ່ໄດ້ຊ່ວຍໃຫ້ພົ້ນຈາກອິດຊະມາເອນລູກຊາຍເນທານີອາ. ນີ້ເປັນເຫດການຫລັງຈາກທີ່ອິດຊະມາເອນ
ໄດ້ຂ້າເກດາລີຢາລູກຊາຍອາຮີການແລ້ວນັ້ນຄື ທະຫານ, ຜູ້ຍິງ, ເດັກນ້ອຍ, ແລະຊາຍຕອນ ທີ່ຊ່ວຍເຫລືອທີ່ກິເບໂອນ.
17ຈາກນັ້ນພວກເຂົາໄດ້ໄປ ແລະພັກຢູ່ຊົ່ວຄາວໃນກິມຮາມ, ທີ່ຢູ່ໃກ້ເບັດເລເຮັມ. ພວກເຂົາຕັ້ງໃຈຈະໄປຍັງເອຢິບ. 18ເນື່ອງດ້ວຍຄົນເຄນເດຍ
ພວກເຂົາຢ້ານຄົນເຫລົ່ານັ້ນຕັ້ງແຕ່ອິດຊະມາເອນລູກຊາຍເນທານີອາໄດ້ຂ້າເກດາລີຢາລູກຊາຍອາຮີການ,
ຜູ້ຊຶ່ງກະສັດແຫ່ງບາບີໂລນໄດ້ຕັ້ງໃຫ້ເປັນຜູ້ດູແລປົກຄອງແຜ່ນດິນນັ້ນ.


generated on Tue Jun 17 19:01:42 2025

42 [1]ຈາກນັ້ນ ບັນດາຫົວຫນ້າຂອງກອງທະຫານ ແລະໂຢຮານານລູກຊາຍກາເຣອາ ແລະເຢຊານີຢາລູກຊາຍໂຮຊາຢາ
ແລະປະຊາຊົນທັງປວງຈາກຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດໄດ້ເຂົ້າມາຫາເຢເຣມີຢາຜູ້ປະກາດພຣະທັມ.[2]ພວກເຂົາເວົ້າກັບເພິ່ນວ່າ,
"ຂໍໃຫ້ຄຳອ້ອນວອນຂອງພວກຂ້ານ້ອຍທັງຫລາຍເປັນທີ່ຍອມຮັບຕໍ່ຫນ້າທ່ານເຖີດ. ຂໍໃຫ້ທ່ານອະທິຖານ
ເພື່ອເຮົາທັງຫລາຍຕໍ່ພຣະຢາເວພຣະເຈົ້າຂອງທ່ານ ເພື່ອຄົນທີ່ເຫລືອຢູ່ທັງຫມົດ ເພາະພວກເຮົາມີຈຳນວນຫນ້ອຍຄົນຢ່າງທີ່ທ່ານເຫັນ.
[3]ຂໍທູນຖາມພຣະຢາເວພຣະເຈົ້າຂອງທ່ານສະແດງຫົນທາງແກ່ເຮົາວ່າ ເຮົາຄວນຈະໄປທາງໃດ ແລະຂໍສະແດງສິ່ງທີ່ເຮົາຄວນຈະເຮັດ."

[4]ດັ່ງນັ້ນ ເຢເຣມີຢາຜູ້ປະກາດພຣະທັມ ກ່າວແກ່ເຂົາທັງຫລາຍວ່າ, "ຂ້ານ້ອຍໄດ້ຍິນທ່ານແລ້ວ. ເບິ່ງແມ,
ຂ້ານ້ອຍຈະອະທິຖານຕໍ່ພຣະຢາເວພຣະເຈົ້າຂອງທ່ານຕາມຄຳຂໍຮ້ອງຂອງທ່ານທັງຫລາຍ. ພຣະຢາເວຈະຊົງຕອບທ່ານປະການໃດ,
ຂ້ານ້ອຍຈະບອກແກ່ທ່ານ. ຂ້ານ້ອຍຈະບໍ່ປິດບັງສິ່ງໃດໄວ້ຈາກທ່ານເລີຍ."[5]ແລ້ວພວກເຂົາເວົ້າກັບເຢເຣມີຢາວ່າ,
"ຂໍພຣະຢາເວຈົ່ງເປັນພະຍານທີ່ສັດຈິງ ແລະສັດຊື່ໃນລະຫວ່າງພວກຂ້ານ້ອຍທັງຫລາຍ,
ຖ້າພວກຂ້ານ້ອຍບໍ່ໄດ້ເຮັດຕາມຖ້ອຍຄຳຂອງພຣະຢາເວພຣະເຈົ້າຂອງທ່ານ ຜູ້ຊຶ່ງໃຊ້ທ່ານໃຫ້ບອກພວກຂ້ານ້ອຍ.[6]ບໍ່ວ່າຈະດີຫລືຮ້າຍ,
ຂ້ານ້ອຍທັງຫລາຍຈະເຊື່ອຟັງພຣະສຸລະສຽງຂອງພຣະຢາເວພຣະເຈົ້າຂອງເຮົາ, ຜູ້ຊຶ່ງຂ້ານ້ອຍທັງຫລາຍສົ່ງທ່ານໃຫ້ໄປຫານັ້ນ,
ເພື່ອເຮົາຈະຢູ່ເຢັນເປັນສຸກ ເມື່ອເຮົາເຊື່ອຟັງພຣະສຸລະສຽງແຫ່ງພຣະຢາເວພຣະເຈົ້າຂອງເຮົາ."
[7]ເມື່ອຄົບສິບວັນແລ້ວ, ພຣະທັມຂອງພຣະຢາເວກໍມາຍັງເຢເຣມີຢາ.[8]ດັ່ງນັ້ນ ເຢເຣມີຢາຈຶ່ງໃຫ້ໄປຕາມຕົວໂຢຮານານລູກຊາຍກາເຣອາ
ແລະບັນດາຫົວຫນ້າຂອງກອງທະຫານຜູ້ຢູ່ກັບທ່ານ, ແລະປະຊາຊົນທັງປວງຕັ້ງແຕ່ຄົນນ້ອຍທີ່ສຸດເຖິງຄົນໃຫຍ່ທີ່ສຸດ.
[9]ແລ້ວເພິ່ນໄດ້ກ່າວກັບພວກເຂົາທັງຫລາຍວ່າ, "ນີ້ເປັນຖ້ອຍຄຳຂອງພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ—
ຜູ້ຊຶ່ງທ່ານໄດ້ໃຊ້ໃຫ້ຂ້ານ້ອຍນຳເອົາຄຳອ້ອນວອນຂອງທ່ານໄປສະເຫນີຕໍ່ພຣະພັກພຣະອົງ—ໄດ້ກ່າວດັ່ງນີ້ວ່າ,[10]'ຖ້າພວກເຈົ້າທັງຫລາຍກັບໄປ
ແລະອາໄສຢູ່ໃນແຜ່ນດິນນີ້, ແລ້ວເຮົາຈະສ້າງພວກເຈົ້າທັງຫລາຍຂຶ້ນ ແລະບໍ່ທຳລາຍລົງ; ເຮົາຈະປູກພວກເຈົ້າ ແລະ ບໍ່ຖອນພວກເຈົ້າເສຍ,
ເພາະເຮົາໄດ້ກັບໃຈຈາກເຫດຮ້າຍຊຶ່ງເຮົາໄດ້ສົ່ງມາເຫນືອພວກເຈົ້າຫັນກັບໄປ.
[11]ຢ່າຢ້ານກະສັດແຫ່ງບາບີໂລນ, ຜູ້ຊຶ່ງພວກເຈົ້າກຳລັງຢ້ານກົວຢູ່ນັ້ນ. ຢ່າຢ້ານລາວເລີຍ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເຮົາຢູ່ກັບພວກເຈົ້າທັງຫລາຍ ເພື່ອຊ່ວຍພວກເຈົ້າໃຫ້ລອດພົ້ນ ແລະຊ່ວຍພວກເຈົ້າໃຫ້ພົ້ນຈາກມືຂອງລາວ.
[12]ເພາະເຮົາຈະມີຄວາມເມດຕາຕໍ່ພວກເຈົ້າ. ເຮົາຈະໃຫ້ຄວາມກະລຸນາແກ່ພວກເຈົ້າ,
ແລະເຮົາຈະນຳພວກເຈົ້າກັບໄປຢູ່ໃນແຜ່ນດິນຂອງພວກເຈົ້າ.
[13]ແຕ່ຖ້າພວກເຈົ້າທັງຫລາຍເວົ້າວ່າ, "ພວກເຮົາຈະບໍ່ຢູ່ໃນແຜ່ນດິນນີ້" —
ຖ້າພວກເຈົ້າບໍ່ຍອມເຊື່ອຟັງສຽງຂອງພຣະຢາເວພຣະເຈົ້າຂອງພວກເຈົ້າ.[14]ຖ້າພວກເຈົ້າກ່າວວ່າ, 'ບໍ່ເອົາ, ພວກເຮົາຈະເຂົ້າໄປໃນແຜ່ນດິນເອຢິບ,
ບ່ອນທີ່ເຮົາຈະບໍ່ເຫັນສົງຄາມ ຈະບໍ່ໄດ້ຍິນສຽງເຂົາສັດ ຈະບໍ່ຫິວເຂົ້າຫນົມປັງ ແລະເຮົາທັງຫລາຍຈະອາໄສຢູ່ບ່ອນນັ້ນ."
[15]ບັດນີ້ ພວກເຈົ້າຄົນຍູດາທີ່ເຫລືອຢູ່, ຂໍຟັງພຣະທັມຂອງພຣະຢາເວ. ພຣະຢາເວຈອມໂຍທາ, ພຣະເຈົ້າຂອງອິດສະຣາເອນ, ກ່າວດັ່ງນີ້ວ່າ,
'ຖ້າພວກເຈົ້າອອກເດີນທາງມຸ່ງຫນ້າໄປເອຢິບແທ້ໆ, ແລະໄປອາໄສໃນບ່ອນນັ້ນ.
[16]ແລ້ວດາບຊຶ່ງພວກເຈົ້າຢ້ານກົວຢູ່ນັ້ນຈະຕາມທັນພວກເຈົ້າບ່ອນນັ້ນໃນແຜ່ນດິນເອຢິບ.
ການກັນດານອາຫານຊຶ່ງພວກເຈົ້າຢ້ານກົວຢູ່ນັ້ນຈະຕິດຕາມພວກເຈົ້າໄປເຖິງເອຢິບ, ແລະພວກເຈົ້າຈະຕາຍໃນບ່ອນນັ້ນ.[17]ເພາະສະນັ້ນ
ສິ່ງທີ່ຈະເກີດຂຶ້ນກັບທຸກຄົນຊຶ່ງມຸ້ງຫນ້າໄປຍັງເອຢິບ ເພື່ອຈະຢູ່ບ່ອນນັ້ນຈະຕາຍເສຍດ້ວຍດາບ, ດ້ວຍການອຶດຫິວອາຫານ,
ຫລືດ້ວຍພະຍາດລະບາດ. ຈະບໍ່ມີຄົນທີ່ເຫລືອຢູ່ ຫລືທີ່ລອດຊີວິດຈາກໄພພິບັດຮ້າຍ ຊຶ່ງເຮົາຈະນຳມາເຫນືອພວກເຂົາ.
[18]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ:
ເຮົາຖອກຄວາມໂກດຮ້າຍຂອງເຮົາແລະຄວາມໂກດຮ້າຍຂອງເຮົາລົງເຫນືອຊາວເຢຣູຊາເລັມຢ່າງໃດ,
ເຮົາຈະຖອກຄວາມໂກດຮ້າຍຂອງເຮົາເຫນືອພວກເຈົ້າທັງຫລາຍຢ່າງນັ້ນ ຖ້າພວກເຈົ້າໄປຍັງເອຢິບ. ພວກເຈົ້າຈະເປັນຄຳສາບແຊ່ງ
ເປັນທີ່ຫນ້າປະຫລາດໃຈ, ເປັນຄຳສາບແຊ່ງ, ແລະເປັນທີ່ນິນທາ, ແລະພວກເຈົ້າຈະບໍ່ເຫັນບ່ອນນີ້ອີກ.'"[19]ແລ້ວເຢເຣມີຢາໄດ້ກ່າວວ່າ,
"ພວກຄົນຍູດາທີ່ຍັງເຫລືອຢູ່ເອີຍ—ພຣະຢາເວໄດ້ກ່າວເລື່ອງທ່ານແລ້ວວ່າ, ຢ່າໄປຍັງເອຢິບ! ພວກທ່ານຮູ້ຄັກແລ້ວວ່າ
ມື້ນີ້ຂ້ານ້ອຍໄດ້ຕັກເຕືອນພວກທ່ານແລ້ວ.
[20]ເພາະພວກທ່ານທັງຫລາຍໄດ້ຫລອກລວງຕົນເອງຢ່າງຮ້າຍແຮງ ເມື່ອພວກທ່ານໄດ້ໃຊ້ຂ້ານ້ອຍໄປຫາພຣະຢາເວພຣະເຈົ້າຂອງທ່ານ
ແລະກ່າວວ່າ, 'ຂໍອະທິຖານເພື່ອເຮົາຕໍ່ພຣະຢາເວພຣະເຈົ້າຂອງເຮົາໃຫ້ກັບພວກເຮົາ. ພຣະຢາເວພຣະເຈົ້າຂອງເຮົາຈະກ່າວປະການໃດ,
ຂໍບອກແກ່ເຮົາ, ແລະເຮົາຈະເຮັດຕາມ.'[21]ຂ້ານ້ອຍໄດ້ປະກາດພຣະທັມນັ້ນແກ່ທ່ານທັງຫລາຍໃນມື້ນີ້ແລ້ວ,
ແຕ່ທ່ານບໍ່ໄດ້ເຊື່ອຟັງພຣະສຸລະສຽງຂອງພຣະຢາເວພຣະເຈົ້າຂອງທ່ານ ຫລືສິ່ງໃດທີ່ພຣະອົງຊົງໃຊ້ຂ້ານ້ອຍມາບອກທ່ານ.[22]ເພາະສະນັ້ນ ບັດນີ້
ພວກທ່ານຈົ່ງຮູ້ສາວ່າ ທ່ານທັງຫລາຍຈະຕາຍດ້ວຍດາບ, ດ້ວຍການອຶດຫິວອາຫານ, ແລະດ້ວຍພະຍາດລະບາດ
ໃນສະຖານທີ່ຊຶ່ງທ່ານທັງຫລາຍປາດຖະຫນາຈະໄປອາໄສຢູ່."

 generated on Tue Jun 17 19:01:42 2025

# 43

[1]ສິ່ງນີ້ໄດ້ເກີດຂຶ້ນເມື່ອເຢເຣມີຢາໄດ້ສຳເລັດການປະກາດຖ້ອຍຄຳທັງປວງຂອງພຣະຢາເວພຣະເຈົ້າຂອງພວກເຂົາທັງຫລາຍ ເຖິງປະຊາຊົນ
ຊຶ່ງພຣະຢາເວພຣະເຈົ້າຂອງເຂົາໄດ້ຊົງໃຊ້ທ່ານໃຫ້ໄປເວົ້າພຣະທັມທັງຫມົດນີ້ກັບພວກເຂົາ.[2]ອາຊາຣີຢາລູກຊາຍໂຮຊາຢາ
ແລະໂຢຮານານລູກຊາຍກາເຣອາ ແລະບັນດາຜູ້ຊາຍທີ່ຈອງຫອງໄດ້ເວົ້າກັບເຢເຣມີຢາວ່າ, "ທ່ານເວົ້າຂີ້ຕົວະ.
ພຣະຢາເວພຣະເຈົ້າຂອງເຮົາບໍ່ໄດ້ໃຊ້ທ່ານໃຫ້ມາເວົ້າວ່າ,
'ຢ່າໄປເອຢິບເພື່ອຈະອາໄສຢູ່ບ່ອນນັ້ນ.'[3]ເພາະບາຣຸກລູກຊາຍເນຣີຢາໄດ້ຍົວະເຍົ້າທ່ານໃຫ້ຂັດຂວາງພວກເຮົາ
ເພື່ອຈະມອບເຮົາໄວ້ໃນມືຂອງຄົນເຄນເດຍ, ເພາະທ່ານເປັນເຫດໃຫ້ພວກເຮົາຕາຍ ແລະເຮັດໃຫ້ເຮົາໄປເປັນຊະເລີຍໃນບາບີໂລນ."

[4]ດັ່ງນັ້ນ ໂຢຮານານລູກຊາຍກາເຣອາ ແລະບັນດາຫົວຫນ້າຂອງກອງທະຫານ,
ແລະປະຊາຊົນທັງຫມົດບໍ່ເຊື່ອຟັງພຣະສຸລະສຽງຂອງພຣະຢາເວເລື່ອງທີ່ຈະອາໄສຢູ່ໃນແຜ່ນດິນຢູດາ.[5]ແຕ່ໂຢຮານານລູກຊາຍກາເຣອາ
ແລະບັນດາຜູ້ຫົວຫນ້າຂອງກອງທະຫານກໍໄດ້ພາຄົນຢູດາທຸກຄົນທີ່ເຫລືອຢູ່ທັງຫມົດ
ຄືຜູ້ທີ່ໄດ້ກັບມາຈາກບັນດາປະຊາຊາດທີ່ພວກເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ ໄດ້ກັບມາຢູ່ໃນແຜ່ນດິນຢູດາ.[6]ພວກຜູ້ຊາຍ, ຜູ້ຍິງ ເດັກນ້ອຍ,
ບັນດາລູກສາວ, ແລະທຸກຄົນຊຶ່ງເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ, ໄດ້ເຫລືອໄວ້ໃຫ້ແກ່ເກດາລີຢາລູກຊາຍອາຮີການ
ຜູ້ເປັນລູກຊາຍຊາຟານ. ພວກເຂົາໄດ້ນຳເຢເຣມີຢາຜູ້ປະກາດພຣະທັມ ແລະບາຣຸກລູກຊາຍເນຣີຢາໄປນຳ.[7]ພວກເຂົາໄດ້ມາຍັງແຜ່ນດິນເອຢິບ,
ມາເຖິງນະຄອນຕະປັນເຂດ, ເພາະພວກເຂົາບໍ່ເຊື່ອຟັງພຣະສຸລະສຽງຂອງພຣະຢາເວ.
[8]ດັ່ງນັ້ນ ພຣະທັມຂອງພຣະຢາເວມາຍັງເຢເຣມີຢາໃນນະຄອນຕະປັນເຂດ, ກ່າວວ່າ,[9]"ຈົ່ງຖືກ້ອນຫີນໃຫຍ່ ໄວ້ໃນມືຂອງເຈົ້າ,
ແລະເຊື່ອງໄວ້ໃນດິນຫນຽວໃນເຕົາເຜົາດິນຈີ່,
ຊຶ່ງຢູ່ທີ່ທາງເຂົ້າໄປສູ່ພະລາຊະວັງຂອງຟາຣາໂອໃນນະຄອນຕະປັນເຂດທ່າມກາງສາຍຕາຂອງຄົນຢູດາ."[10]ແລ້ວຈົ່ງກ່າວແກ່ພວກເຂົາວ່າ,
"ພຣະຢາເວຈອມໂຢທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, 'ເບິ່ງແມ, ເຮົາຈະໃຊ້ແລະນຳເນບູກາດເນັດຊາກະສັດແຫ່ງບາບີໂລນ
ຜູ້ຮັບໃຊ້ຂອງເຮົາ. ເຢເຣມີຢາເອີຍ ເຮົາຈະຕັ້ງພະທີ່ນັ່ງຂອງຕົນເຫນືອຫີນເຫລົ່ານີ້, ຊຶ່ງເຈົ້າໄດ້ເຊື່ອງໄວ້.
ເນບູກາດເນັດຊາຈະກາງເຕັ້ນຂອງຕົນເຫນືອຫີນເຫລົ່ານີ້.
[11]ເມື່ອທ່ານມາເຖິງ ແລະທ່ານຈະໂຈມຕີແຜ່ນດິນເອຢິບ. ຜູ້ໃດທີ່ຖືກກຳນົດໃຫ້ເຖິງຄວາມຕາຍຈະຖືກມອບໃຫ້ແກ່ຄວາມຕາຍ.
ຜູ້ໃດຖືກກຳນົດໃຫ້ເປັນຊະເລີຍກໍຈະຖືກມອບໃຫ້ເປັນຊະເລີຍ. ແລະຜູ້ໃດທີ່ຖືກກຳນົດໃຫ້ຖືກດາບກໍຈະຖືກມອບໃຫ້ແກ່ດາບ.
[12]ແລ້ວເຮົາຈະກໍໄຟໃນວິຫານຂອງພະເອຢິບ. ເນບູກາດເນັດຊາຈະເຜົາເສຍພວກເຂົາ ແລະຈັບພວກເຂົາໄປເປັນຊະເລີຍ.
ລາວຈະປົກຄຸມຕົວເອງດ້ວຍແຜ່ນດິນເອຢິບເຫມືອນກັບຜູ້ລ້ຽງແກະປົກຄຸມຕົວເອງດ້ວຍເສື້ອຄຸມ. ແລະລາວຈະໄປຈາກບ່ອນນັ້ນດ້ວຍໄຊຊະນະ.
[13]ລາວຈະຫັກເສົາສັກສິດແຫ່ງເມືອງເບັດເຊເມັດ ຊຶ່ງຢູ່ໃນແຜ່ນດິນເອຢິບ
ແລະຈະເອົາໄຟເຜົາວິຫານຂອງເທບພະເຈົ້າທັງຫລາຍແຫ່ງເອຢິບເສຍ.'"

 generated on Tue Jun 17 19:01:42 2025

# 44

1ພຣະທັມທີ່ມາຍັງເຢເຣມີຢາກ່ຽວກັບບັນດາຊາວຢິວທີ່ອາໄສຢູ່ໃນແຜ່ນດິນເອຢິບທີ່ມີກໂດນ, ທີ່ຕະປັນເຂດ, ທີ່ເມັມຟິດ,
ແລະໃນແຜ່ນດິນປັດໂຣດ ວ່າ,2“ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ:
ພວກເຈົ້າທັງຫລາຍໄດ້ເຫັນບັນດາເຫດຮ້າຍທີ່ເຮົານຳມາເຫນືອນະຄອນເຢຣູຊາເລັມ ແລະເຫນືອທົ່ວເມືອງຢູດາທັງຫມົດ. ເບິ່ງແມ,
ທຸກມື້ນີ້ເມືອງເຫລົ່ານັ້ນກໍເປັນບ່ອນຮົກຮ້າງ. ບໍ່ມີຜູ້ໃດອາໄສຢູ່ໃນນັ້ນເລີຍ.3ນີ້ເປັນເພາະຄວາມຊົ່ວຊຶ່ງພວກເຂົາໄດ້ເຮັດ
ໄດ້ຍົວະເຍົ້າເຮົາໃຫ້ມີຄວາມຮ້າຍ ດ້ວຍການທີ່ພວກເຂົາໄປເຜົາເຄື່ອງຫອມ ແລະບົວລະບັດພະອື່ນ ຊຶ່ງບໍ່ຮູ້ຈັກ ບໍ່ວ່າເຂົາເອງ ຫລື
ພວກເຈົ້າທັງຫລາຍ ຫລືບັນພະບູລຸດຂອງພວກເຈົ້າກໍບໍ່ຮູ້ໄດ້ຮູ້ຈັກ.

4ດັ່ງນັ້ນ ເຮົາຈຶ່ງໄດ້ໃຊ້ບັນດາຜູ້ຮັບໃຊ້ຂອງເຮົາທຸກຄົນ ຄືບັນດາຜູ້ປະກາດພຣະທັມມາຍັງພວກເຈົ້າຢ່າງບໍ່ຂາດສາຍ. ກ່າວວ່າ,
‘ຈົ່ງຢ່າເຮັດສິ່ງອັນຫນ້າກຽດຊັງນີ້ ຊຶ່ງເຮົາກຽດຊັງ.’5ແຕ່ພວກເຂົາບໍ່ຟັງ ຫລືຫງ່ຽງຫູຟັງ ຫລືຖອຍຫລັງກັບຈາກຄວາມຊົ່ວຮ້າຍຂອງຕົນ
ໃນການເຜົາເຄື່ອງຫອມແກ່ພະອື່ນໆ.6ເພາະສະນັ້ນເຮົາຈຶ່ງໄດ້ຖອກຄວາມພິໂລດ ແລະ ຄວາມໂກດຮ້າຍຂອງເຮົາອອກ
ໃຫ້ພຸ່ງຂຶ້ນເປັນໄຟໃນທົ່ວເມືອງຢູດາ ແລະໃນຖະຫນົນຫົນທາງຂອງນະຄອນເຢຣູຊາເລັມ. ດັ່ງນັ້ນເມືອງເຫລົ່ານັ້ນຈຶ່ງໄດ້ກາຍເປັນຊາກຫັກພັງ
ແລະ ຮົກຮ້າງຢ່າງທຸກມື້ນີ້.”
7ດັ່ງນັ້ນ ບັດນີ້ ພຣະຢາເວພຣະເຈົ້າຈອມໂຍທາ ແລະ ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ,
“ເປັນຫຍັງພວກເຈົ້າທັງຫລາຍຈຶ່ງເຮັດຄວາມຊົ່ວຮ້າຍຍິ່ງໃຫຍ່ນີ້ແກ່ຈິດໃຈພວກເຈົ້າເອງ?
ເປັນຫຍັງພວກເຈົ້າຈຶ່ງເຮັດໃຫ້ຕົວເອງຖືກຕັດອອກໄປຈາກທ່າມກາງຢູດາ—ທັງພວກຜູ້ຊາຍ, ຜູ້ຍິງທັງເດັກ, ແລະເດັກແດງ?
ຈົນບໍ່ມີຄົນທີ່ເຫລືອຢູ່ໄວ້ແກ່ພວກເຈົ້າເລີຍ.8ພວກເຈົ້າທັງຫລາຍໄດ້ຍົວະເຍົ້າເຮົາໃຫ້ຮ້າຍ ດ້ວຍມືຂອງພວກເຈົ້າ
ດ້ວຍການເຜົາເຄື່ອງຫອມໃຫ້ແກ່ພະອື່ນໃນແຜ່ນດິນເອຢິບ ບ່ອນທີ່ພວກເຈົ້າມາຢູ່ນັ້ນ ພວກເຈົ້າໄດ້ໄປທີ່ນັ້ນເພື່ອພວກເຈົ້າຈະຕ້ອງຖືກທຳລາຍ,
ແລະເປັນທີ່ສາບແຊ່ງ ເປັນທີ່ນິນທາທ່າມກາງບັນດາປະຊາຊາດແຫ່ງແຜ່ນດິນໂລກ.
9ພວກເຈົ້າໄດ້ລືມຄວາມຊົ່ວຂອງບັນພະບູລຸດຂອງພວກເຈົ້າ ແລະການກະທຳຄວາມຊົ່ວຂອງບັນດາກະສັດແຫ່ງຢູດາ ແລະ
ບັນດາຄວາມຊົ່ວຂອງບາງສະຫນົມ ແລະມະເຫສີຂອງພວກເຂົາແລ້ວບໍ? ພວກເຈົ້າໄດ້ລືມຄວາມຊົ່ວຂອງພວກເຈົ້າເອງ
ແລະຄວາມຊົ່ວຂອງເມຍຂອງພວກເຈົ້າ ຊຶ່ງພວກນາງໄດ້ເຮັດໃນແຜ່ນດິນຢູດາ ແລະຕາມຖະຫນົນຫົນທາງຂອງນະຄອນເຢຣູຊາເລັມແລ້ວບໍ?
10ແມ່ນແຕ່ມື້ນີ້, ພວກເຂົາກໍຍັງບໍ່ໄດ້ຖ່ອມຕົວລົງ ຫລືຢຳເກງພຣະບັນຍັດ ຫລືຕາມກົດເກນຂອງເຮົາ ຊຶ່ງເຮົາໃຫ້ມີໄວ້ຕໍ່ຫນ້າພວກເຈົ້າທັງຫລາຍ
ແລະຕໍ່ຫນ້າບັນພະບູລຸດຂອງພວກເຈົ້າ, ຫລືດຳເນີນຕາມພຣະບັນຍັດເຫລົ່ານັ້ນ.”
11ເພາະສະນັ້ນ ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ຈຶ່ງກ່າວດັ່ງນີ້ວ່າ, “ເບິ່ງແມ,
ເຮົາຈະມຸ່ງຫນ້າຂອງເຮົາຕໍ່ສູ້ພວກເຈົ້າໃຫ້ເກີດການຮ້າຍ ແລະຈະຕັດຢູດາອອກເສຍໃຫ້ຫມົດສິ້ນ.
12ເພາະເຮົາຈະນຳເອົາປະຊາຊົນຢູດາທີ່ເຫລືອຢູ່ ຜູ້ທີ່ໄດ້ອອກເດີນທາງມຸ່ງຫນ້າໄປແຜ່ນດິນເອຢິບເພື່ອຈະອາໄສຢູ່ນັ້ນ.
ພວກເຂົາທັງຫລາຍຈະຖືກຜານດ້ວຍດາບ ແລະ ດ້ວຍການອຶດຫິວອາຫານ ຕັ້ງແຕ່ຄົນເລັກນ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ
ພວກເຂົາຈະຕາຍດ້ວຍດາບ ແລະດ້ວຍການອຶດຫິວອາຫານ. ພວກເຂົາຈະກາຍເປັນຄຳສາບ, ເປັນທີ່ຫນ້າປະຫລາດໃຈ, ເປັນຄຳສາບແຊ່ງ,
ແລະເປັນທີ່ນິນທາ, ແລະ ສິ່ງທີ່ຫນ້າຢ້ານກົວ.
13ເພາະເຮົາຈະຕ້ອງລົງໂທດຄົນເຫລົ່ານັ້ນ ຜູ້ອາໄສຢູ່ໃນແຜ່ນດິນເອຢິບ ດັ່ງທີ່ເຮົາລົງໂທດນະຄອນເຢຣູຊາເລັມດ້ວຍດາບ,
ດ້ວຍການອຶດຫິວອາຫານ, ແລະດ້ວຍພະຍາດລະບາດ.14ຈົນບໍ່ມີຜູ້ລີ້ໄພ ຫລືຜູ້ລອດຊີວິດຂອງຄົນຢູດາທີ່ເຫລືອຢູ່
ຜູ້ຊຶ່ງມາອາໄສໃນແຜ່ນດິນເອຢິບນັ້ນ ຈະກັບໄປຍັງແຜ່ນດິນຢູດາ, ເຖິງແມ່ນວ່າພວກເຂົາປາດຖະຫນາຈະກັບໄປອາໄສຢູ່ທີ່ນັ້ນ.
ບໍ່ມີໃຜຈັກຄົນໃນພວກເຂົາຈະໄດ້ກັບໄປ, ນອກຈາກບາງຄົນຜູ້ທີ່ຈະລົບຫນີພົ້ນໄປຈາກທີ່ນີ້.”
15ແລ້ວພວກຜູ້ຊາຍທຸກຄົນ ຜູ້ທີ່ໄດ້ຮູ້ວ່າເມຍຂອງຕົນໄດ້ຖວາຍເຄື່ອງຫອມແກ່ພະອື່ນໆ ແລະບັນດາຜູ້ຍິງທີ່ຢືນຢູ່ໃກ້ທີ່ຊຸມນຸມໃຫຍ່
ຄືບັນດາປະຊາຊົນຜູ້ອາໄສໃນປັດໂຣດ ໃນແຜ່ນດິນເອຢິບ ໄດ້ຕອບເຢເຣມີຢາ.16ພວກເຂົາເວົ້າວ່າ,
“ສຳລັບຖ້ອຍຄຳຊຶ່ງທ່ານໄດ້ບອກແກ່ເຮົາໃນພຣະນາມຂອງພຣະຢາເວນັ້ນ—ພວກເຮົາຈະບໍ່ຟັງທ່ານ.17ເພາະເຮົາຈະເຮັດທຸກສິ່ງທີ່ເຮົາໄດ້ເວົ້າໄວ້
—ຄືເຜົາເຄື່ອງຫອມຖວາຍພວກເຈົ້າແມ່ແຫ່ງຟ້າສະຫວັນ ແລະຖອກເຄື່ອງດື່ມຖວາຍແກ່ພະນາງພວກເຈົ້າ ດັ່ງທີ່ເຮົາໄດ້ເຮັດ,
ບັນພະບູລຸດຂອງເຮົາ, ບັນດາກະສັດ, ແລະພວກເຈົ້ານາຍຂອງເຮົາໄດ້ເຮັດ ໃນທົ່ວເມືອງຢູດາ ແລະຕາມຖະຫນົນຫົນທາງນະຄອນເຢຣູຊາເລັມ.
ແລ້ວພວກເຮົາຈຶ່ງມີອາຫານບໍລິບູນຢູ່ເຢັນເປັນສຸກ, ປາດສະຈາກການພົບເຫັນເຫດຮ້າຍໃດໆ.
18ເມື່ອເຮົາງົດການເຜົາເຄື່ອງຫອມແຫ່ງພວກເຈົ້າແມ່ແຫ່ງຟ້າສະຫວັນ ແລະຖອກເຄື່ອງດື່ມຖວາຍແກ່ພະນາງພວກເຈົ້າ ເຮົາກໍຂັດສົນທຸກຢ່າງ
ທັງຖືກຜານດ້ວຍດາບ ແລະດ້ວຍການອຶດຫິວອາຫານ.”19ພວກຜູ້ຍິງເຫລົ່ານັ້ນກ່າວວ່າ,
“ເມື່ອເຮົາເຜົາເຄື່ອງຫອມຖວາຍພວກເຈົ້າແມ່ແຫ່ງຟ້າສະຫວັນ ແລະຖອກເຄື່ອງດື່ມຖວາຍແກ່ພະນາງ
ເຮົາເຮັດນອກເຫນືອຄວາມເຫັນຊອບຂອງຜົວຂອງເຮົາບໍ ທີ່ເຮົາໄດ້ເຮັດເຂົ້າຫນົມຖວາຍເພື່ອນະມັດສະການພະນາງພວກເຈົ້າ
ແລະທີ່ໄດ້ຖອກເຄື່ອງດື່ມຖວາຍແກ່ພະນາງ?”
20ແລ້ວເຢເຣມີຢາໄດ້ຕອບບັນດາປະຊາຊົນ—ທັງພວກຜູ້ຊາຍ ແລະ ຜູ້ຍິງ ແລະປະຊາຊົນທັງປວງຜູ້ໃຫ້ຄຳຕອບແກ່ທ່ານ—ທ່ານໄດ້ປະກາດ
ແລະໄດ້ກ່າວວ່າ,21“ພຣະຢາເວບໍ່ໄດ້ຊົງຈົດຈຳໄວ້ບເຄື່ອງຫອມທີ່ທ່ານໄດ້ເຜົາຖວາຍໃນທົ່ວເມືອງຢູດາ
ແລະຕາມຖະຫນົນຫົນທາງນະຄອນເຢຣູຊາເລັມບໍ—ທັງຕົວທ່ານ ແລະບັນພະບູລຸດຂອງທ່ານ, ບັນດາກະສັດ ແລະພວກເຈົ້ານາຍຂອງທ່ານ,
ແລະປະຊາຊົນແຫ່ງແຜ່ນດິນນັ້ນ? ເພາະພຣະຢາເວໄດ້ຊົງລະນຶກເຖິງເລື່ອງນີ້; ຊຶ່ງມັນເຂົ້າມາໃນຄວາມຄິດຂອງພຣະອົງ.
22ແລ້ວພຣະຢາເວຈະຊົງທົນຕໍ່ການກະທຳອັນຊົ່ວຮ້າຍຂອງທ່ານ ແລະການອັນ ຫນ້າກຽດຊັງຊຶ່ງທ່ານໄດ້ເຮັດນັ້ນຕໍ່ໄປອີກບໍ່ໄຫວແລ້ວ,
ເພາະສະນັ້ນແຜ່ນດິນຂອງທ່ານຈຶ່ງໄດ້ກາຍເປັນທີ່ຮົກຮ້າງ; ແລະທີ່ຫນ້າປະຫລາດໃຈ ແລະເປັນທີ່ສາບແຊ່ງ, ປາດສະຈາກຄົນອາໄສ ດັ່ງທຸກມື້ນີ້;
23ເພາະວ່າທ່ານໄດ້ເຜົາເຄື່ອງຫອມ ແລະເພາະວ່າທ່ານໄດ້ເຮັດບາບຕໍ່ພຣະຢາເວ. ແລະບໍ່ເຊື່ອຟັງພຣະສຸລະສຽງຂອງພຣະຢາເວ.

ຫລືດຳເນີນຕາມພຣະບັນຍັດຂອງພຣະອົງ, ຕາມກົດເກນຂອງພຣະອົງ ແລະຕາມພຣະໂອວາດຂອງພຣະອົງ, ຄວາມຮ້າຍນີ້ຈຶ່ງໄດ້ຕົກແກ່ທ່ານ
ດັ່ງທຸກມື້ນີ້.”
24 ແລ້ວເຢເຣມີຢາໄດ້ກ່າວແກ່ປະຊາຊົນທັງຫມົດ ແລະ ພວກຜູ້ຍິງທັງຫມົດທຸກຄົນວ່າ, “ຄົນຢູດາທຸກຄົນຜູ້ຢູ່ໃນແຜ່ນດິນເອຢິບເອີຍ,
ຈົ່ງຟັງພຣະທັມຂອງພຣະຢາເວ. 25 ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, ‘ຕົວພວກເຈົ້າ ແລະ
ເມຍຂອງພວກເຈົ້າໄດ້ຢືນຢັນດ້ວຍປາກຂອງພວກເຈົ້າທັງຫລາຍເອງ ແລະໄດ້ເຮັດດ້ວຍມືຂອງພວກເຈົ້າຕາມທີ່ພວກເຈົ້າໄດ້ເວົ້າວ່າ,
“ພວກເຮົາຈະເຮັດຕາມການປະຕິຍານຂອງເຮົາ ຊຶ່ງເຮົາໄດ້ປະຕິຍານໄວ້ແນ່ນອນ ຄືເຜົາເຄື່ອງຫອມຖວາຍພວກເຈົ້າແມ່ແຫ່ງຟ້າສະຫວັນ
ແລະຖອກເຄື່ອງດື່ມຖວາຍແກ່ພະນາງພວກເຈົ້າ.” ບັດນີ້ກໍສຳເລັດຕາມຄຳປະຕິຍານຂອງພວກເຈົ້າແລ້ວ; ໄດ້ເຮັດຕາມການປະຕິຍານນັ້ນແລ້ວ.’
26 ເພາະສະນັ້ນ, ຄົນຢູດາທັງຫມົດທີ່ຢູ່ໃນແຜ່ນດິນເອຢິບເອີຍ, ຈົ່ງຟັງພຣະທັມຂອງພຣະຢາເວ, ກ່າວວ່າ, ‘ເບິ່ງແມ,
ເຮົາໄດ້ປະຕິຍານໂດຍນາມອັນຍິ່ງໃຫຍ່ຂອງເຮົາ—ພຣະຢາເວກ່າວວ່າ, ຈະບໍ່ມີປາກຂອງຄົນໃດໃນຢູດາຕະຫລອດທົ່ວແຜ່ນດິນເອຢິບ,
ຈະບໍ່ອອກນາມຂອງເຮົາໂດຍກ່າວວ່າ, ‘ອົງພຣະຢາເວພຣະເຈົ້າອົງຊົງພຣະຊົນຢູ່ສັນໃດ.’ 27 ເບິ່ງແມ, ເຮົາຄອຍຖ້າເບິ່ງຢູ່ເພື່ອໃຫ້ເກີດຄວາມຮ້າຍ
ແລະບໍ່ແມ່ນຄວາມດີ. ຄົນຢູດາທັງຫມົດຜູ້ຢູ່ໃນແຜ່ນດິນເອຢິບຈະຖືກຜານເສຍດ້ວຍດາບ ແລະດ້ວຍການອຶດຫິວອາຫານ
ຈົນກວ່າຈະເຖິງທີ່ສຸດຂອງພວກເຂົາ. 28 ແລ້ວບັນດາຜູ້ທີ່ຫນີພົ້ນດາບຈະກັບຈາກແຜ່ນດິນເອຢິບໄປຍັງແຜ່ນດິນຢູດາ ຈະມີຈຳນວນຫນ້ອຍ.
ດັ່ງນັ້ນຄົນຢູດາທີ່ເຫລືອຢູ່ທັງຫມົດຊຶ່ງມາອາໄສຢູ່ໃນແຜ່ນດິນເອຢິບ ຈະຮູ້ວ່າຄຳຂອງໃຜຈະການເປັນຈິງ: ຖ້ອຍຄຳຂອງເຮົາ
ຫລືຖ້ອຍຄຳຂອງພວກເຂົາ.
29 ນີ້ຈະເປັນຫມາຍສຳຄັນແກ່ພວກເຈົ້າ—ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ—ທີ່ເຮົາຈະລົງໂທດພວກເຈົ້າໃນທີ່ນີ້,
ເພື່ອພວກເຈົ້າຈະໄດ້ຮູ້ວ່າ ຄຳຂອງເຮົາຈະຕັ້ງຫມັ້ນຄົງຢູ່ຕໍ່ພວກເຈົ້າ ໃຫ້ເກີດຄວາມຮ້າຍຢ່າງແນ່ນອນ.’ 30 ພຣະຢາເວກ່າວດັ່ງນີ້ວ່າ, ‘ເບິ່ງແມ,
ເຮົາຈະມອບຟາຣາໂອໂຮຟະຣາກະສັດແຫ່ງເອຢິບໄວ້ໃນມືສັດຕູຂອງລາວ ແລະໃນມືຂອງຄົນເຫລົ່ານັ້ນທີ່ສະແຫວງຫາຊີວິດຂອງລາວ.
ຊຶ່ງເປັນຢ່າງດຽວກັນດັ່ງທີ່ເຮົາໄດ້ມອບເຊເດກີຢາກະສັດແຫ່ງຢູດາ ໄວ້ໃນມືຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ,
ຜູ້ຊຶ່ງເປັນສັດຕູຂອງລາວ ແລະຊອກຫາເອົາຊີວິດຂອງລາວ.”

45 [1]ນີ້ເປັນຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທັມບອກແກ່ບາຣຸກລູກຊາຍເນຣີຢາ.
ສິ່ງນີ້ໄດ້ເກີດຂຶ້ນເມື່ອທ່ານໄດ້ຂຽນຖ້ອຍຄຳເຫລົ່ານີ້ລົງໃນຫນັງສືມ້ວນຕາມຄຳບອກຂອງເຢເຣມີຢາ—
ນີ້ເປັນປີທີສີ່ແຫ່ງລາຊະການເຢໂຮຢາກີມ ລາຊະໂອລົດລູກຂອງໂຢສີຢາ, ກະສັດແຫ່ງຢູດາວ່າ,[2]“ບາຣຸກເອີຍ, ພຣະຢາເວ,
ພຣະເຈົ້າແຫ່ງອິດສະຣາເອນ, ກ່າວແກ່ທ່ານດັ່ງນີ້ວ່າ:[3]ພວກເຈົ້າເວົ້າວ່າ, ‘ບັດນີ້ ວິບັດແກ່ຂ້ານ້ອຍ,
ເພາະພຣະຢາເວຊົ່ງເພີ່ມຄວາມທຸກເຂົ້າໃສ່ຄວາມເສົ້າໂສກຂອງຂ້ານ້ອຍ. ຂ້ານ້ອຍກໍຫນັກຫນ່ວງດ້ວຍການຮ້ອງຄາງຂອງຕົນເອງ;
ຂ້ານ້ອຍບໍ່ປະສົບຄວາມສະຫງົບເລີຍ.’

[4]‘ພຣະຢາເວກ່າວດັ່ງນີ້ວ່າ ນີ້ເປັນສິ່ງທີ່ເຈົ້າຈົ່ງບອກລາວກ່າວວ່າ: ເບິ່ງແມ, ສິ່ງໃດທີ່ເຮົາກໍ່ສ້າງຂຶ້ນ, ເຮົາຈະທຳລາຍລົງ. ສິ່ງໃດທີ່ເຮົາໄດ້ປູກ,
ເຮົາກຳລັງຈະຖອນຂຶ້ນ—ຄືແຜ່ນດິນນີ້ທັງຫມົດ.[5]ແລະພວກເຈົ້າຈະຫາສິ່ງໃຫຍ່ໂຕເພື່ອຕົວເອງບໍ? ຢ່າຫວັງສິ່ງນັ້ນເລີຍ. ເພາະເບິ່ງແມ,
ໄພພິບັດກຳລັງມາເຫນືອມະນຸດທັງຫມົດ—ນີ້ເປັນຄຳປະກາດຂອງພຣະຢາເວ—
ແຕ່ເຮົາຈະໃຫ້ຊີວິດແກ່ເຈົ້າເຫມືອນເປັນຂອງທີ່ຮິບມາໄດ້ຂອງເຈົ້າ ໃນທຸກສະຖານທີ່ທີ່ພວກເຈົ້າຈະໄປ.”


generated on Tue Jun 17 19:01:42 2025

# 46

[1]ນີ້ເປັນພຣະທັມຂອງພຣະຢາເວຊຶ່ງມາຍັງເຢເຣມີຢາຜູ້ປະກາດພຣະທັມກ່ຽວກັບເລື່ອງບັນດາປະຊາຊາດ.[2]ເລື່ອງເອຢິບວ່າ:
“ກ່ຽວດ້ວຍກອງທັບຂອງຟາຣາໂອເນໂກ້, ກະສັດແຫ່ງເອຢິບ ຊຶ່ງຢູ່ທີ່ແຄມແມ່ນ້ຳເອຟຣາດ. ທີ່ເມືອງກາເກມິດ ແລະຊຶ່ງເນບູກາດເນັດຊາ
ກະສັດແຫ່ງບາບີໂລນໄດ້ໂຈມຕີແຕກໃນປີທີສີ່ແຫ່ງລາຊະການເຢໂຮຢາກີມ ລາຊະລູກຂອງໂຢສີຢາ, ກະສັດແຫ່ງຢູດາວ່າ:[3]“ຈົ່ງຕຽມດັ້ງ ໂລ່
ແລະເຂົ້າສູ່ສົງຄາມ.[4]ຈົ່ງຜູກອານມ້າ; ພົນມ້າເອີຍ ຈົ່ງຂຶ້ນຂີ່ມ້າເຖີດ, ຈົ່ງສວມຫມວກເຫລັກຂອງພວກເຈົ້າ; ຈົ່ງຂຶ້ນຂີ່ມ້າເຫລົ່ານັ້ນ
ແລະຈົ່ງເຂົ້າປະຈຳທີ່ ຈົ່ງຮັດຫນ້າເອິກຂອງພວກເຈົ້າ ຈົ່ງສວມເສື້ອເກາະຂອງເຈົ້າ.

[5]ເຮົາກຳລັງເຫັນຫຍັງຢູ່ທີ່ນີ້? ພວກເຂົາເຕັມດ້ວຍຄວາມຢ້ານກົວ ແລະກຳລັງຫັນຫລັງກັບ, ເພາະພວກນັກຮົບຂອງພວກເຂົາຖືກຕີລົ້ມລົງ
ແລະໄດ້ປົບຫນີໄປຍັງທີ່ປອດໄພ ແລະພວກເຂົາບໍ່ຫລຽວກັບຫລັງ. ຄວາມຢ້ານກົວຢູ່ທຸກດ້ານ—ພຣະຢາເວກ່າວດັ່ງນີ້ແຫລະ—
[6]ຄົນໄວກໍຫນີໄປບໍ່ໄດ້ ແລະນັກຮົບກໍຫນີໄປບໍ່ລອດພົ້ນ. ພວກເຂົາຈະສະດຸດ ແລະລົ້ມລົງໃນແດນເຫນືອຂ້າງແມ່ນ້ຳເອຟຣາດ.
[7]ແມ່ນໃຜນໍ່ໂຜ່ຂຶ້ນມາເຫມືອນແມ່ນ້ຳນາຍ, ດັ່ງນ້ຳຂອງມັນຊັດຂຶ້ນ ແລະລົງເຫມືອນແມ່ນ້ຳເຫລົ່ານັ້ນ?[8]ເອຢິບໂຜ່ຂຶ້ນມາເຫມືອນນ້ຳນາຍ
ເຫມືອນແມ່ນ້ຳທັງຫລາຍທີ່ຂຶ້ນ ແລະ ລົງ. ເອຢິບກ່າວວ່າ, ‘ຂ້ານ້ອຍຈະຂຶ້ນໄປ ແລະຂ້ານ້ອຍຈະປົກຄອງໂລກ. ຂ້ານ້ອຍຈະທຳລາຍຫົວເມືອງ
ແລະຊາວເມືອງນັ້ນເສຍ.[9]ມ້າທັງຫລາຍເອີຍ, ບຸກຫນ້າໄປເຖີດ. ລົດຮົບທັງຫລາຍເອີຍບຸກເຂົ້າເຖີດ, ຈົ່ງໃຫ້ນັກຮົບອອກໄປ ຄືຄົນກູເຊ ແລະ
ຄົນພູດ, ຜູ້ຖືໂລ່ ຄົນລູດີ, ນັກຖື ແລະ ໂກ່ງຄັນທະນູທັງຫລາຍ.’
[10]ມື້ນີ້ເປັນວັນແຫ່ງອົງພຣະຢາເວພຣະເຈົ້າຈອມໂຍທາ, ແລະພຣະອົງຈະຊົງແກ້ແຄ້ນບັນດາສັດຕູຂອງພຣະອົງເອງ. ດາບເຫລົ່ານັ້ນຈະກິນຈົນອີ່ມ.
ມັນຈະດື່ມເລືອດຂອງພວກເຂົາຈົນເຕັມຄາບ. ເພາະຈະມີເຄື່ອງບູຊາແດ່ພຣະຢາເວ
ພຣະເຈົ້າຈອມໂຍທາເຮັດການບູຊາໃນແດນເຫນືອຂ້າງແມ່ນ້ຳເອຟຣາດ.
[11]ທິດາພົມມະຈາລີແຫ່ງເອຢິບເອີຍ, ຈົ່ງຂຶ້ນໄປທີ່ກີເລອາດ ແລະໄປເອົາຫວ້ານຢາ. ພວກເຈົ້າໄດ້ໃຊ້ຢາເປັນຈຳນວນຫລາຍແລ້ວ.
ມັນບໍ່ມີປະໂຫຍດທີ່ເຈົ້າຈະເອົາຢາມາໃສ່ໃຫ້ກັບຕົວເຈົ້າ. ບໍ່ມີການຮັກສາໃດໆສຳລັບພວກເຈົ້າ.
[12]ບັນດາປະຊາຊາດໄດ້ຍິນເຖິງຄວາມອັບອາຍຂອງພວກເຈົ້າ ແລະແຜ່ນດິນກໍເຕັມດ້ວຍສຽງຮ້ອງຂອງພວກເຈົ້າ, ເພາະວ່ານັກຮົບສະດຸດລົ້ມ;
ພວກເຂົາໄດ້ລົ້ມລົງນຳກັນ.”
[13]ນີ້ເປັນພຣະທັມຊຶ່ງພຣະຢາເວກ່າວກັບເຢເຣມີຢາຜູ້ປະກາດພຣະທັມ ເມື່ອເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ມາ
ແລະໂຈມຕີແຜ່ນດິນເອຢິບວ່າ:[14]“ຈົ່ງປະກາດໃນເອຢິບ ແລະ ປ່າວປະກາດໃນມິກໂດນ, ຈົ່ງປະກາດໃນເມັມຟິດ, ແລະຕະປັນ-ເຂດ.
ຈົ່ງເຂົ້າປະຈຳທີ່ ແລະຕຽມຕົວເຈົ້າເອງໃຫພ້ອມໄວ້ ແລະຕຽມຕົວພ້ອມ, ເພາະວ່າດາບຈະກິນຢູ່ຮອບຕົວພວກເຈົ້າ.
[15]ເປັນຫຍັງຊາຍທີ່ກ້າຫານຂອງພວກເຈົ້າຈຶ່ງຊົບຫນ້າລົງພື້ນດິນ? ພວກເຂົາບໍ່ຢືນຫມັ້ນຢູ່, ເພາະວ່າພຣະຢາເວເອງ, ໄດ້ຊຸກຍູ້ໃຫ້ລົ້ມລົງ.
[16]ພຣະອົງຊົງເຮັດໃຫ້ຄົນເປັນຈຳນວນຫລາຍສະດຸດ. ພວກເຂົາລົ້ມລົງ ແລະເວົ້າວ່າ, ‘ລຸກຂຶ້ນເຖີດ. ໃຫ້ເຮົາກັບໄປຍັງຊົນຊາດຂອງເຮົາ,
ໄປຍັງແຜ່ນດິນທີ່ເຮົາຖືກຳເນີດ. ເພາະເລື່ອງດາບຂອງຜູ້ບີບບັງຄັບ.’[17]ພວກເຂົາໄດ້ເອີ້ນ, ‘ຟາຣາໂອ ກະສັດແຫ່ງເອຢິບໄດ້ແຕ່ຮ້ອງສຽງອຶກກະທຶກ
ຜູ້ປ່ອຍໃຫ້ໂອກາດຜ່ານໄປ.’
[18]ເຮົາມີຊີວິດຢູ່ສັນໃດ ຈະມີຜູ້ຫນຶ່ງມາຢ່າງພູເຂົາຕາໂບ ແລະພູເຂົາກາເມນຢູ່ຂ້າງທະເລສັນນັ້ນ.[19]ພວກເຈົ້າຜູ້ອາໄສໃນເອຢິບເອີຍ,
ຈົ່ງຕຽມເຄື່ອງຂອງສຳລັບຕົວພວກເຈົ້າເພື່ອການຖືກກວາດໄປເປັນຊະເລີຍ. ເພາະວ່າເມືອງເມັມຟິດຈະກາຍເປັນທີ່ຖິ້ມຮ້າງ ເປັນທີ່ເພພັງ,
ປາດສະຈາກຜູ້ອາໄສ.
[20]ເອຢິບເປັນເຫມືອນງົວສາວໂຕງາມ, ແຕ່ແມງທີ່ຕອດກຳລັງມາຈາກທິດເຫນືອ. ມັນກຳລັງມາເຖິງ.[21]ພວກທະຫານຮັບຈ້າງທີ່ຢູ່ທ່າມກາງນາງ
ກໍເຫມືອນລູກງົວທີ່ໄດ້ຜູກໄວ້, ແຕ່ພວກເຂົາຖອຍຫລັງກັບ ແລະຫນີໄປນຳກັນ.
ພວກເຂົາຈະບໍ່ຕໍ່ຕ້ານເພາະວັນແຫ່ງໄພພິບັດໄດ້ມາເຫນືອພວກເຂົາ, ເປັນເວລາແຫ່ງການລົງໂທດພວກເຂົາ.
[22]ເອຢິບເຮັດສຽງເຫມືອນງູທີ່ກຳລັງເລື້ອອອກໄປ, ເພາະສັດຕູຂອງນາງຈະຍ່າງຂະບວນເຂົ້າມາດ້ວຍກຳລັງທັບ ແລະມາສູ້ກັບນາງ.
ພວກເຂົາກຳລັງມຸ່ງຫນ້າໄປຫານາງ ເຫມືອນຢ່າງຄົນເຫລົ່ານັ້ນທີ່ປ້າຕົ້ນໄມ້ລົງດ້ວຍຂວານ.
[23]ພວກເຂົາຈະຕັດປ່າຂອງນາງລົງ—ນີ້ເປັນຄຳປະກາດຂອງພຣະຢາເວ —ເຖິງວ່າຈະຫນາທຶບຫລາຍກໍຕາມ.
ເພາະພວກສັດຕູຈະມີຈຳນວນຫລາຍກວ່າຝູງຕັກແຕນຈົນນັບບໍ່ຖ້ວນ.[24]ທິດາຂອງເອຢິບຈະຖືກເຮັດໃຫ້ອັບອາຍ
ນາງຈະຖືກມອບໄວ້ໃນມືຂອງຊົນຊາດຫນຶ່ງຈາກທິດເຫນືອ.”
[25]ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວວ່າ, “ເບິ່ງແມ,
ເຮົາຈະນຳການລົງໂທດມາເຫນືອເຫລົ່າຝູງຊົນຂອງອາໂມນແຫ່ງເມືອງເທເບດ, ຟາຣາໂອ, ເອຢິບ ແລະບັນດາພະທັງຫລາຍ,
ບັນດາຟາຣາໂອກະສັດທັງປວງຂອງນາງ ແລະຄົນທັງຫລາຍທີ່ວາງໃຈໃນລາວ.
[26]ເຮົາຈະມອບພວກເຂົາໄວ້ໃນມືຂອງບັນດາຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ ໃນມືຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ
ແລະພວກຂ້າລາຊະການຂອງເພິ່ນ. ແລ້ວພາຍຫລັງເອຢິບຈຶ່ງຈະມີຄົນອາໄສຢູ່ເຫມືອນສະໄຫມກ່ອນ—ນີ້ເປັນຄຳປະກາດຂອງພຣະຢາເວ.
[27]ແຕ່ເຈົ້າ, ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ, ຢ່າຢ້ານເລີຍ. ຢ່າຕົກໃຈເລີຍ, ເພາະເບິ່ງແມ, ເຮົາຈະຊ່ວຍພວກເຈົ້າໃຫ້ລອດພົ້ນໄດ້ຈາກທີ່ໄກ, ແລະ
ຊ່ວຍເຊື້ອສາຍຂອງເຈົ້າຈາກແຜ່ນດິນທີ່ພວກເຂົາຕົກເປັນຊະເລີຍ. ຢາໂຄບຈະກັບມາ, ແລະມີຄວາມສະຫງົບຄວາມສະບາຍ,
ແລະບໍ່ມີຜູ້ໃດເຮັດໃຫ້ພວກເຂົາຢ້ານກົວ.[28]ໂອ ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ, ຢ່າຢ້ານເລີຍ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເຮົາຢູ່ກັບພວກເຈົ້າ, ເພື່ອທີ່ເຮົາຈະເຮັດໃຫ້ບັນດາປະຊາຊາດທັງຫມົດມາເຖິງທີ່ອະວະສານ
ຄືປະຊາຊາດທີ່ເຮົາໄດ້ບັນດານພວກເຈົ້າໃຫ້ໄປຢູ່ນັ້ນ. ແຕ່ສ່ວນພວກເຈົ້າເຮົາຈະບໍ່ທຳລາຍຈົນຫມົດສິ້ນ. ແຕ່ເຮົາຈະຕີສອນພວກເຈົ້າຢ່າງເປັນທຳ
ແລະ ເຮົາຈະບໍ່ປ່ອຍໃຫ້ພວກເຈົ້າບໍ່ຖືກລົງໂທດເປັນອັນຂາດ.”

47 [1]ນີ້ເປັນພຣະທັມຂອງພຣະຢາເວ ຊຶ່ງມາຍັງເຢເຣມີຢາຜູ້ປະກາດພຣະທັມ ກ່ຽວກັບເລື່ອງຟີລິດສະຕິນ.
ພຣະທັມນີ້ໄດ້ມາຍັງທ່ານກ່ອນທີ່ຟາຣາໂອຈະໂຈມຕີເມືອງຄາຊາ.[2]“ພຣະຢາເວກ່າວດັ່ງນີ້ວ່າ: ເບິ່ງແມ,
ນໍ້າທັງຫລາຍກຳລັງຂຶ້ນມາຈາກທິດເຫນືອ. ນໍ້າເຫລົ່ານັ້ນຈະກາຍເປັນກະແສນໍ້າຖ້ວມ ແລ້ວມັນຈະຖ້ວມແຜ່ນດິນ
ແລະສາລະພັດຊຶ່ງຢູ່ໃນແຜ່ນດິນນັ້ນ, ທັງເມືອງທັງຫລາຍ ແລະຜູ້ທີ່ອາໄສຢູ່ໃນເມືອງເຫລົ່ານັ້ນ! ດ້ວຍເຫດນີ້
ທຸກຄົນຈະຮ້ອງໄຫ້ຂໍຄວາມຊ່ວຍເຫລືອ, ແລະຊາວແຜ່ນດິນທຸກຄົນຈະຮ້ອງຄາງ.

[3]ເມື່ອໄດ້ຍິນສຽງກີບມ້າໂຕແຂງແຮງຂອງລາວໂດດແລ່ນ, ເມື່ອໄດ້ສຽງລໍ້ດຣົບຂອງລາວແລ່ນເຂົ້າມາ ແລະສຽງລໍ້ລົດດັງກຶກກ້ອງ,
ພວກພໍ່ກໍຈະບໍ່ໄດ້ຖອຍຫລັງກັບມາເບິ່ງລູກທັງຫລາຍຂອງຕົນ ເພາະມືຂອງເຂົາອ່ອນເພຍເຕັມທີແລ້ວ;[4]ເພາະມື້ທີ່ຈະມາເຖິງ
ຊຶ່ງຈະທຳລາຍຟີລິດສະຕິນທັງຫມົດ ຈະຕັດອອກຈາກເມືອງຕີເຣ ແລະເມືອງຊີໂດນ ເພາະພຣະຢາເວຈະຊົງທຳລາຍຄົນຟີລິດສະຕິນ
ຄືພວກຄົນທີ່ຍັງເຫລືອຢູ່ຈາກເກາະຄະຟະໂຊ.
[5]ຄວາມລາບຄາບເມືອງຄາຊາກໍ. ສ່ວນເມືອງອາຊະກາໂລນ, ຖືກຕັດອອກພ້ອມດ້ວຍຄົນທີ່ເຫລືອຢູ່ໃນພູເຂົາຂອງພວກເຂົາ
ຈະຖືກເຮັດໃຫ້ງຽບສະຫງົບ. ເຈົ້າຈະປາດເນື້ອເຖືອຫນັງຂອງພວກເຈົ້າອີກດົນເທົ່າໃດ?[6]ໂອ, ດາບແຫ່ງພຣະຢາເວ!
ອີກດົນປານໃດຈຶ່ງຈະສະຫງົບລົງ? ຈົ່ງສອດເຂົ້າໄວ້ໃນຝັກສາຂອງເຈົ້າເຖີດ! ຈົ່ງຢຸດພັກ ແລະ ຢູ່ຢ່າງສະຫງົບສາ.[7]ມັນຈະສະຫງົບໄດ້ຢ່າງໃດບໍ,
ເພາະພຣະຢາເວຊົງໄດ້ບັນຊາເຈົ້າ. ພຣະອົງຊົງໄດ້ເອີ້ນເຈົ້າໃຫ້ໂຈມຕີເມືອງອາຊະກາໂລນ ແລະ ໂຈມຕີແຜ່ນດິນແຄມທະເລ.”

 generated on Tue Jun 17 19:01:42 2025

48 [1]ກ່ຽວກັບເລື່ອງໂມອາບ, ພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ, “ວິບັດແກ່ເນໂບ,
ເພາະເປັນບ່ອນຖືກຖິ້ມຮ້າງ. ກີຣິອາດທາຢິມໄດ້ຖືກຍຶດເປັນຊະເລີຍ ແລະອັບອາຍ. ປ້ອມປາການຂອງເມືອງນັ້ນໄດ້ຖືກທໍາລາຍ
ແລະໄດ້ຮັບຄວາມອັບອາຍຂາຍຫນ້າ.[2]ບໍ່ມີການສັນເສີນໂມອາບອີກຕໍ່ໄປ. ສັດຕູຂອງພວກເຂົາໄດ້ເຂົ້າໃນເມືອງເຮັດຊະໂບນ.
ພວກເຂົາໄດ້ຄິດວາງແຜນປອງຮ້າຍຕໍ່ສູ້ເມືອງນັ້ນ ພວກເຂົາໄດ້ກ່າວວ່າ, ‘ມາແມ, ແລະໃຫ້ພວກເຮົາຕັດມັນອອກເສຍ
ຢ່າໃຫ້ເປັນປະຊາຊາດຫນຶ່ງ. ເມືອງມັດເມັນ ກໍຈະຖືກຕັດລົງຄືກັນ—ດາບຈະໄລ່ຕິດຕາມພວກເຈົ້າໄປ.’

[3]ຟັງແມ! ຈະມີສຽງຮ້ອງມາແຕ່ໂຮໂຣນາຢິມ, ບ່ອນທີ່ມີຊາກຫັກພັງ ແລະການທໍາລາຍຢ່າງໃຫຍ່ຫລວງ.[4]ເມືອງໂມອາບຖືກທໍາລາຍເສຍແລ້ວ
ໄດ້ຍິນສຽງຮ້ອງໄຫ້ຈາກພວກເດັກນ້ອຍຂອງນາງ.[5]ພວກເຂົາຈະຂຶ້ນໄປຮ້ອງໄຫ້ຢູ່ທາງຂຶ້ນເມືອງລູຮີດ,
ເພາະໄດ້ຍິນສຽງຮ້ອງໄຫ້ມາຕາມທາງລົງໄປເມືອງໂຮໂຣນາຢິມ, ຍ້ອນການທໍາລາຍນັ້ນ.
[6]ຈົ່ງຫນີເອົາຕົວລອດສາ! ຈົ່ງຮັກສາຊີວິດຂອງພວກເຈົ້າໃຫ້ລອດ ແລະເປັນເຫມືອນພຸ່ມໄມ້ທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານ.
[7]ເພາະວ່າພວກເຈົ້າໄດ້ວາງໃຈໃນຜົນງານ ແລະ ໃນຊັບສົມບັດຂອງພວກເຈົ້າ, ພວກເຈົ້າຈະຕ້ອງຖືກຈັບໄປເປັນຊະເລີຍ.
ແລ້ວພະເຄໂມດກໍຈະຕ້ອງຖືກກວາດໄປເປັນຊະເລີຍເຫມືອນກັນ, ພ້ອມກັບປະໂລຫິດ ແລະພວກເຈົ້ານາຍຂອງພວກເຂົາ.
[8]ຜູ້ທໍາລາຍຈະມາເຫນືອເມືອງທຸກເມືອງ; ບໍ່ມີເມືອງໃດຈະລອດພົ້ນໄປໄດ້. ພູພຽງຈະຕ້ອງພິນາດ ແລະທົ່ງພຽງຈະຕ້ອງຖືກທໍາລາຍ,
ດັ່ງທີ່ພຣະຢາເວຊົງກ່າວພຣະຄໍາເວົ້າໄວ້.[9]ຈົ່ງໃຫ້ປີກແກ່ໂມອາບ, ເພາະວ່າມັນຈະບິນໄປຢ່າງແນ່ນອນ. ຫົວເມືອງຂອງມັນຈະກາຍເປັນທີ່ຮົກຮ້າງ,
ບໍ່ມີຄົນອາໄສຢູ່ໃນເມືອງເຫລົ່ານັ້ນເລີຍ.[10]ຂໍໃຫ້ຄົນກຽດຄ້ານໃນການເຮັດວຽກຂອງພຣະຢາເວຢ່າງຖືກສາບແຊ່ງ!
ຂໍໃຫ້ຜູ້ທີ່ກັນບໍ່ໃຫ້ດາບຂອງຕົນເຮັດໃຫ້ຄົນເລືອດຕົກຖືກສາບແຊ່ງ!
[11]ໂມອາບສະບາຍຕັ້ງແຕ່ຫນຸ່ມ. ລາວເປັນເຫມືອນກັບເຫລົ້າອະງຸ່ນທີ່ບໍ່ເຄີຍຖ່າຍເທອອກຈາກພາຊະນະ ນີ້ໄປພາຊະນະນັ້ນ.
ລາວບໍ່ເຄີຍຖືກກວາດໄປເປັນຊະເລີຍ ດັ່ງນັ້ນ ລົດຊາດຈຶ່ງຍັງຢູ່ໃນນັ້ນ ແລະກິ່ນກໍບໍ່ປ່ຽນແປງ.[12]ເພາະສະນັ້ນເບິ່ງແມ, ວັນເວລາຈະມາເຖິງ—
ນີ້ເປັນຄໍາປະກາດຂອງພຣະຢາເວ—ເມື່ອເຮົາຈະສົ່ງນັກຖ່າຍເທມາໃຫ້ລາວເພື່ອເຮັດໃຫ້ລາວຖ່າຍເທ ແລະຖອກພາຊະນະຂອງລາວໃຫ້ກ້ຽງ
ແລະຕີໄຫຂອງລາວໃຫ້ແຕກເປັນປ່ຽງ.
[13]ແລ້ວໂມອາບກໍຈະໄດ້ອັບອາຍເພາະພະເຄໂມດ ເຫມືອນທີ່ເຊື້ອສາຍອິດສະຣາເອນໄດ້ອັບອາຍເພາະເບັດເອນ, ອັນເປັນທີ່ວາງໃຈຂອງພວກເຂົາ.
[14]ພວກເຈົ້າຈະວ່າຢ່າງໃດໄດ້ວ່າ, ‘ເຮົາເປັນພວກວິລະຊົນ, ທະຫານສໍາລັບສົງຄາມ?’
[15]ເມືອງໂມອາບຖືກທໍາລາຍໃຫ້ເປັນທີ່ຮົກຮ້າງ ແລະຫົວເມືອງຕ່າງໆຈະຖືກໂຈມຕີ. ເພາະພວກຄົນຫນຸ່ມທີ່ຄັດເລືອກແລ້ວກໍລົງໄປສູ່ການຖືກຂ້າ.
ນີ້ເປັນຄໍາປະກາດຂອງພຣະມະຫາກະສັດ! ພຣະຢາເວຈອມໂຍທາ ຄືພຣະນາມຂອງພຣະອົງ.[16]ໄພພິບັດຂອງໂມອາບຢູ່ໃກ້ແລ້ວ;
ຄວາມທຸກໃຈຂອງລາວກໍຫລັ່ງເຂົ້າມາ.[17]ບັນດາຜູ້ທີ່ຢູ່ຮອບລາວ, ຈົ່ງເສຍໃຈນໍາເຂົາສາ; ແລະບັນດາຜູ້ທີ່ຮູ້ຈັກຊື່ລາວດ້ວຍ, ຈົ່ງກ່າວວ່າ, ‘ວິບັດ,
ແກ່ໄມ້ຄ້ອນເທົ້າຊົງລິດ, ຄືຄະທາອໍານາດອັນຮຸ່ງເຮືອງນັ້ນ, ໄດ້ຫັກເສຍແລ້ວ.’
[18]ທິດາຜູ້ອາໄສໃນເມືອງດີໂບນເອີຍ, ຈົ່ງລົງມາຈາກສະຫງ່າລາສີຂອງພວກເຈົ້າ, ແລະນັ່ງດ້ວຍຄວາມກະຫາຍ.
ເພາະຜູ້ທໍາລາຍໂມອາບຈະມາສູ້ກັບພວກເຈົ້າ, ເຂົາຈະທໍາລາຍທີ່ກໍາບັງເຂັ້ມແຂງຂອງພວກເຈົ້າ.[19]ຈົ່ງຢືນເຝົ້າຢູ່ຂ້າງທາງ,
ຊາວເມືອງອາໂຣເອເອີຍ. ຈົ່ງຖາມຊາຍທີ່ຫນີມາ ແລະຜູ້ຍິງທີ່ລອດພົ້ນມາວ່າ, ‘ເກີດເລື່ອງຫຍັງຂຶ້ນ?’[20]ໂມອາບຖືກເຮັດໃຫ້ອັບອາຍ,
ເພາະມັນແຕກເສຍແລ້ວ. ຮ້ອງຄາງ ແລະ ຮ້ອງໄຫ້ຮໍ່າໄຮຢູ່; ຮ້ອງຂໍຄວາມຊ່ວຍເຫລືອ. ຈົ່ງບອກຄົນແຖວແມ່ນໍ້າອາໂນນວ່າ
ໂມອາບຖືກທໍາລາຍເສຍແລ້ວ.’
[21]ບັດນີ້ ການລົງໂທດໄດ້ຕົກເຫນືອເຂດພູພຽງ, ເຫນືອໂຮໂລນ, ຢາຊາ ແລະເມຟະອາດ,[22]ແລະດີໂບນ, ເນໂບ, ແລະເບັດ ດິບລາທາຢິມ,
[23]ແລະກີຣິອາດທາຢິມ, ເບັດກາມູນ, ແລະເບັດເມໂອນ.[24]ແລະເກຣີໂຢດ ໂບຊະຣາ, ແລະຫົວເມືອງທັງຫມົດຂອງແຜ່ນດິນໂມອາບ—ທັງໄກ
ແລະໃກ້.[25]ເຂົາຂອງໂມອາບຖືກຕັດອອກແລ້ວ ແລະແຂນຂອງມັນກໍຫັກ—ນີ້ເປັນຄໍາປະກາດຂອງພຣະຢາເວ.
[26]ຈົ່ງເຮັດໃຫ້ລາວມຶນເມົາ, ຍ້ອນລາວໄດ້ພອງຕົວຂຶ້ນຕໍ່ພຣະຢາເວ. ຈົ່ງປ່ອຍໃຫ້ໂມອາບກິ້ງເກືອກຢູ່ໃນຮາກຂອງຕົນ,
ແລະໃຫ້ລາວຖືກເຍາະເຍີ້ຍເປັນທີ່ດູຖູກ.[27]ເພາະອິດສະຣາເອນໄດ້ກາຍເປັນທີ່ເຍາະເຍີ້ຍແກ່ພວກເຈົ້າບໍ່ແມ່ນຫລື?
ເຈົ້າໄດ້ພົບລາວຢູ່ທ່າມກາງໂຈນບໍ? ເພື່ອໃຫ້ເຈົ້າໄດ້ແກວ່ງຫົວໃສ່ລາວ ຫລາຍຄັ້ງເທົ່າກັບທີ່ເຈົ້າໄດ້ເວົ້າເຖິງລາວ?
[28]ຊາວເມືອງໂມອາບເອີຍ ຈົ່ງອອກເສຍຈາກຫົວເມືອງ ແລະ ໄປອາໄສຢູ່ໃນຫີນຜາ, ຈົ່ງເປັນເຫມືອນນົກເຂົາຊຶ່ງເຮັດຮັງຢູ່ຂ້າງປາກຖໍ້າໃນລືບຫີນ.
[29]ເຮົາໄດ້ຍິນເຖິງຄວາມອວດຕົວຂອງໂມອາບ—ຄວາມອວດຕົວ, ຄວາມອວດດີ, ຄວາມຈອງຫອງໃນກຽດສັກສີຂອງລາວ,
ແລະຄວາມຖືຕົວຍົກຕົນໃນໃຈຂອງລາວ.
[30]ນີ້ເປັນຄໍາປະກາດຂອງພຣະຢາເວກ່າວວ່າ—ເຮົາຮູ້ຄໍາເວົ້າຫມິ່ນປະຫມາດຂອງລາວ, ທີ່ບໍ່ມີຄ່າອັນໃດເລີຍ
ເຊັ່ນດຽວກັບການກະທໍາທັງຫລາຍຂອງເຂົາ.[31]ເພາະສະນັ້ນ ເຮົາຈະຮ້ອງຄາງເພື່ອໂມອາບ, ແລະເຮົາຈະຮ້ອງໄຫ້ຮໍ່າໄຮເພື່ອໂມອາບທັງຫລາຍ.
ເຮົາຈະຄໍາຄວນເພື່ອຄົນຂອງກີເຮຣາເຮເສັດ.[32]ເຄືອອະງຸ່ນແຫ່ງສິບມາເອີຍ, ເຮົາຈະຮ້ອງໄຫ້ເພື່ອພວກເຈົ້າຫລາຍກວ່າເພື່ອຢາເຊ!
ກິ່ງທັງຫລາຍຂອງພວກເຈົ້າຍື່ນຂ້າມທະເລຈົນເຖິງທະເລຂອງຢາເຊ. ຜູ້ທໍາລາຍໄດ້ໂຈມຕີຫມາກໄມ້ລະດູຮ້ອນ
ແລະການເກັບອະງຸ່ນຂອງພວກເຈົ້າ.
[33]ດັ່ງນັ້ນ ຄວາມຍິນດີ ແລະ ຄວາມຊື່ນບານໄດ້ຖືກກວາດອອກໄປເສຍຈາກສວນໄຮ່ນາ ແລະແຜ່ນດິນຂອງໂມອາບ.
ເຮົາໄດ້ເຮັດໃຫ້ເຫລົ້າອະງຸ່ນຢຸດໄຫລຈາກໄຫອະງຸ່ນ ບໍ່ມີຄົນຢຽບອະງຸ່ນຂອງພວກເຂົາ. ພວກເຂົາຈະບໍ່ຢຽບອະງຸ່ນດ້ວຍສຽງໂຫ່ຮ້ອງ.
ສຽງໂຫ່ຮ້ອງນັ້ນບໍ່ແມ່ນສຽງໂຫ່ຮ້ອງດ້ວຍຄວາມຍິນດີເລີຍ.
[34]ຈາກສຽງຮ້ອງທີ່ເມືອງເຮັດຊະໂບນໄປໄກເຖິງເມືອງເອເລອາເລ, ສຽງຂອງພວກເຂົາໄດ້ຍິນໄປໄກເຖິງເມືອງຢາຮາດ,
ຈາກເມືອງໂຊອາໄປໄກເຖິງເມືອງໂຮໂຣນາຢິມ, ເນື່ອງຈາກນໍ້າທັງຫລາຍແຫ່ງນິມຣິມກໍຈະບົກແຫ້ງ ດ້ວຍ.
[35]ເພາະເຮົາຈະນໍາອະວະສານມາສູ່ຜູ້ທີ່ຢູ່ໃນໂມອາບ ຜູ້ທີ່ຖວາຍເຄື່ອງບູຊາໃນແທ່ນບູຊາສູງ ແລະເຜົາເຄື່ອງຫອມຖວາຍພະຂອງລາວ—
ນີ້ເປັນຄໍາປະກາດຂອງພຣະຢາເວ.

36ເພາະສະນັ້ນ ໃຈຂອງເຮົາຈະຄໍ່າຄວນເພື່ອໂມອາບເຫມືອນຂຸ່ຍ. ໃຈຂອງເຮົາຈະຄໍ່າຄວນເຫມືອນຂຸ່ຍເພື່ອຄົນເມືອງກີເຣຮາເຣເສັດ.
ຊັບສິນບັດທີ່ລາວໄດ້ມາກໍໄດ້ພິນາດ. 37ເພາະທຸກຫົວຈະຖືກແຖ ແລະ ທຸກເຄົາຈະຖືກໂກນອອກ. ມີຮອຍປາດແຜຢູ່ເທິງມື,
ແລະຈະມີຜ້າກະສອບຢູ່ບັ້ນແອວ.
38ເທິງຫລັງຄາເຮືອນທັງຫມົດຂອງໂມອາບ ແລະຕາມຖະຫນົນຫົນທາງແຫ່ງເມືອງນັ້ນຈະມີແຕ່ສຽງຄໍ່າຄວນທົ່ວໄປ
ເພາະເຮົາຕີໂມອາບເຫມືອນກັບເຮົາຕີພາຊະນະທີ່ເຮົາບໍ່ພໍໃຈບໍ່ຕ້ອງການ—ນີ້ເປັນຄໍາປະກາດຂອງພຣະຢາເວ.
39ມັນຖືກທຸບໃຫ້ແຕກຢ່າງຮາບຄາບ! ພວກເຂົາຈະຮ້ອງຄາງວ່າ, ‘ໂມອາບແຕກແລ້ວນໍ! ໂມອາບຫັນຫລັງກັບດ້ວຍຄວາມອັບອາຍແລ້ວນໍ!
ດັ່ງນັ້ນແຫລະ ໂມອາບໄດ້ກາຍເປັນທີ່ເຍາະເຍີ້ຍ ແລະເປັນທີ່ປະຫລາດໃຈແກ່ບັນດາຜູ້ທີ່ຢູ່ອ້ອມຮອບລາວ.”
40ເພາະພຣະຢາເວກ່າວດັ່ງນີ້ວ່າ, “ເບິ່ງແມ, ສັດຕູຈະບິນເຈີດລົງມາເຫມືອນນົກອິນຊີ, ກາງປີກອອກສູ່ໂມອາບ.
41ເມືອງເກຣີໂຢດໄດ້ຖືກຈັບໄປເປັນຊະເລີຍ, ແລະທີ່ກໍາບັງອັນເຂັ້ມແຂງໄດ້ຖືກຍຶດລ້ອມໄວ້. ເພາະໃນໃນມື້ນັ້ນ
ຈິດໃຈຂອງບັນດານັກຮົບແຫ່ງໂມອາບກໍຈະເປັນເຫມືອນກັບຈິດໃຈຂອງຜູ້ຍິງຊຶ່ງກໍາລັງເຈັບທ້ອງເກີດລູກ.
42ເພາະໂມອາບຈະຖືກທໍາລາຍ ແລະບໍ່ເປັນຊົນຊາດຫນຶ່ງອີກຕໍ່ໄປ, ເພາະວ່າລາວພອງຕົວເອງໃຫ້ຍິ່ງໃຫຍ່ຂຶ້ນຕໍ່ສູ້ກັບພຣະຢາເວ.
43ຊາວເມືອງໂມອາບເອີຍ, ຄວາມຢ້ານ ແລະຂຸມກັບດັກ ແລະແຮ້ວກໍາລັງມາຫາພວກເຈົ້າ—ນີ້ເປັນຄໍາປະກາດຂອງພຣະຢາເວ.
44ຜູ້ໃດທີ່ຫນີຈາກຄວາມຢ້ານກົວຈະຕົກຂຸມ, ແລະຜູ້ທີ່ປີນອອກມາຈາກຂຸມກໍຈະຕິດກັບ, ເພາະເຮົາຈະນໍາສິ່ງເຫລົ່ານີ້ມາເຫນືອໂມອາບ
ໃນປີແຫ່ງການລົງໂທດເຂົາ —ນີ້ເປັນຄໍາປະກາດຂອງພຣະຢາເວ.
45ຜູ້ລີ້ໄພໄດ້ໄປຢືນຢູ່ຢ່າງຫມົດແຮງໃນເງົາເມືອງເຮັດຊະໂບນ ເພາະວ່າໄຟຈະອອກມາຈາກເຮັດຊະໂບນ
ແປວໄຟຈະອອກມາຈາກທ່າມກາງສີໂຮນ ມັນຈະທໍາລາຍດິນແດນຂອງໂມອາບ ແລະຂະຫມ່ອມຂອງບັນດາຄົນແຫ່ງຄວາມວຸ້ນວາຍ.
46ໂມອາບເອີຍ! ວິບັດແກ່ພວກເຈົ້າ ຊົນຊາດແຫ່ງພະເຄໂມດກໍາລັງວອດວາຍຢູ່ແລ້ວ, ເພາະບັນດາລູກຊາຍຂອງພວກເຈົ້າຖືກຈັບໄປເປັນຊະເລີຍ
ແລະ ລູກສາວຂອງພວກເຈົ້າກໍເຂົ້າເປັນຊະເລີຍ. 47ແຕ່ເຮົາຍັງຈະໃຫ້ໂມອາບກັບສູ່ສະພາບເດີມໃນຕໍ່ໄປ—
ນີ້ເປັນຄໍາປະກາດພຣະຢາເວກ່າວດັ່ງນີ້ແຫລະ.” ການພິພາກສາໂມອາບກໍຈົບລົງເທົ່ານີ້.

 generated on Tue Jun 17 19:01:42 2025

49 [1]ກ່ຽວກັບເລື່ອງຄົນອຳໂມນ, ພຣະຢາເວກ່າວວ່າ, “ອິດສະຣາເອນບໍ່ມີລູກຊາຍບໍ?
ບໍ່ມີໃຜຈະຮັບສິ່ງທີ່ເປັນມໍຣະດົກໃນອິດສະຣາເອັນເລີຍບໍ? ເປັນຫຍັງກະສັດຂອງພວກເຂົາຈຶ່ງຍຶດຄອງລາດ
ແລະປະຊາຊົນຂອງເຂົາໄດ້ອາໄສຢູ່ໃນເມືອງທັງຫລາຍຂອງຄາດເປັນມໍຣະດົກ?[2]ເພາະສະນັ້ນເບິ່ງແມວັນເວລາຈະມາເຖິງ—
ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອເຮົາຈະເຮັດໃຫ້ໄດ້ຍິນສຽງສັນຍານສົງຄາມ ສູ້ກັບນະຄອນຣັບບາຂອງຄົນອຳໂມນ
ມັນຈະກາຍເປັນກອງຊາກເມືອງທີ່ຮົກຮ້າງ ແລະຊົນນະບົດຂອງເມືອງນັ້ນຈະຖືກເຜົາເສຍດ້ວຍໄຟ
ເພາະອິດສະຣາເອນຈະເຂົ້າຍຶດຄອງພວກທີ່ເຄີຍຍຶດຄອງເຂົາ.” ພຣະຢາເວກ່າວດັ່ງນີ້ແຫລະ.

[3]“ເຮັດຊະໂບນເອີຍ, ຈົ່ງຮ້ອງຄາງ, ເພາະເມືອງໄອຖືກທຳລາຍໃຫ້ຮົກຮ້າງ! ລູກສາວແຫ່ງນະຄອນຣັບບາເອີຍ, ຈົ່ງຮ້ອງໄຫ້ຮ່ຳໄຮ!
ຈົ່ງເອົາຜ້າກະສອບຄາດແອວໄວ້. ຈົ່ງຄ່ຳຄວນແລ່ນໄປແລ່ນມາຢູ່ທ່າມກາງຮົ້ວ, ເພາະໂມເລກຈະຕ້ອງຖືກກວາດໄປເປັນຊະເລີຍ
ພ້ອມກັບປະໂລຫິດ ແລະພວກເຈົ້ານາຍຂອງມັນ.[4]ລູກສາວຜູ້ຫລອກລວງເອີຍ, ເປັນຫຍັງພວກເຈົ້າໂອ້ອວດບັນດາພູເຂົາ,
ພູເຂົາຂອງພວກເຈົ້າມີນ້ຳໄຫລ? ຜູ້ວາງໃຈໃນສົມບັດຂອງຕົນ ແລະ ກ່າວວ່າ, ‘ໃຜຈະມາສູ້ຂ້ານ້ອຍນະ?’
[5]ເບິ່ງແມ, ເຮົາກຳລັງຈະນຳຄວາມຢ້ານກົວມາເຫນືອພວກເຈົ້າ — ອົງພຣະຢາເວພຣະເຈົ້າຈອມໂຍທາກ່າວວ່າ—
ຄວາມຫນ້າຢ້ານກົວຈະມາຈາກທຸກຄົນທີ່ຢູ່ຮອບຕົວພວກເຈົ້າ. ເຈົ້າແຕ່ລະຄົນຈະຖືກຂັບໄລ່ອອກໄປໃຫ້ກະຈັດກະຈາຍໄປ.
ຈະບໍ່ມີໃຜຮວບຮວມຄົນເຫລົ່ານັ້ນທີ່ກຳລັງແລ່ນຫນີໄປ.[6]ແຕ່ພາຍຫລັງເຮົາຈະໃຫ້ຄົນອຳໂມນກັບສູ່ສະພາບເດີມ—
ພຣະຢາເວກ່າວດັ່ງນີ້ແຫລະ.”
[7]ກ່ຽວກັບເມືອງເອໂດມ, ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ, “ບໍ່ມີສະຕິປັນຍາໃດທີ່ພົບໄດ້ໃນເຕມານອີກແລ້ວບໍ?
ຄຳປຶກສາທີ່ດີໄດ້ພິນາດໄປຈາກຜູ້ສະຫລຽວສະຫລາດແລ້ວບໍ? ສະຕິປັນຍາຂອງເຂົາຫາຍສູນໄປແລ້ວບໍ?[8]ຊາວເມືອງເດດານເອີຍ, ຈົ່ງຫນີ?!
ຈົ່ງຖອຍຫລັງກັບ! ຈົ່ງອາໄສໃນຖ້ຳເລິກໃນພື້ນດິນ. ເພາະວ່າເຮົາກຳລັງຈະນຳໄພພິບັດຂອງເອຊາວມາເຫນືອພວກເຂົາ
ເວລາເຮົາຈະລົງໂທດເຂົາ.
[9]ຖ້າຄົນເກັບອະງຸ່ນມາຫາພວກເຈົ້າ ພວກເຂົາຈະບໍ່ຖິ້ມອະງຸ່ນຕົກຄ້າງໄວ້ນຳບໍ? ຖ້າຂີ້ລັກມາຕອນກາງຄືນ
ລາວຈະບໍ່ທຳລາຍພຽງພໍແກ່ຕົວລາວເທົ່ານັ້ນບໍ?[10]ແຕ່ເຮົາໄດ້ເຮັດໃຫ້ເອຊາວເປືອຍຕົວ. ເຮົາໄດ້ເປີດບ່ອນຮັບຂອງລາວ. ດ້ວຍເຫດນີ້
ລາວບໍ່ສາມາດເຊື່ອງຕົວໄດ້ ເຊື້ອສາຍຂອງລາວຖືກທຳລາຍ ພີ່ນ້ອງຂອງລາວ ແລະເພື່ອນບ້ານຂອງລາວ ບໍ່ມີລາວອີກແລ້ວ
ແລະລາວເອງກໍຈາກໄປແລ້ວ.[11]ຈົ່ງຖິ້ມເດັກກຳພ້າພໍ່ຂອງພວກເຈົ້າໄວ້ທາງຫລັງເຖີດ. ເຮົາຈະໃຫ້ເຂົາມີຊີວິດຢູ່,
ແລະແມ່ຫມ້າຍຂອງພວກເຈົ້າວາງໃຈໃນເຮົາສາ.”
[12]ເພາະພຣະຢາເວກ່າວດັ່ງນີ້ວ່າ, “ເບິ່ງແມ, ຖ້າຄົນທີ່ຍັງບໍ່ສົມຄວນຈະດື່ມຈາກຈອກນັ້ນຍັງຕ້ອງດື່ມ. ພວກເຈົ້າຈະພົ້ນໂທດໄປໄດ້ບໍ
ພວກເຈົ້າຈະພົ້ນໂທດໄປໄດບໍ? ພວກເຈົ້າຈະບໍ່ເປັນເຊັ່ນນັ້ນ ເພາະພວກເຈົ້າຈະຕ້ອງດື່ມຢ່າງແນ່ນອນ.[13]ເພາະເຮົາໄດ້ປະຕິຍານໂດຍນາມຂອງເຮົາ
— ນີ້ເປັນຄຳປະກາດຂອງພຣະຢາເວ— ແລ້ວວ່າ ໂບຊະຣາຈະຕ້ອງກາຍເປັນບ່ອນວ່າງເປົ່າເສຍ, ເປັນທີ່ນິນທາ, ເປັນບ່ອນຖິ້ມຮ້າງ,
ແລະເປັນຄຳສາບແຊ່ງ. ຫົວເມືອງທັງຫມົດຂອງລາວຈະເປັນບ່ອນຖິ້ມຮ້າງເປັນນິດ.”
[14]ຂ້ານ້ອຍໄດ້ຍິນຂ່າວຈາກພຣະຢາເວ ແລະຜູ້ສົ່ງຂ່າວຄົນຫນຶ່ງຖືກສົ່ງໄປທ່າມກາງບັນດາປະຊາຊາດວ່າ,
‘ຈົ່ງຮວບຮວມພວກເຈົ້າທັງຫລາຍເຂົ້າມາຕໍ່ສູ້ເມືອງນັ້ນ. ຈົ່ງຕຽມພ້ອມລຸກຂຶ້ນເຮັດສົງຄາມ.’[15]ເພາະວ່າ ເບິ່ງແມ,
ເຮົາຈະເຮັດໃຫ້ພວກເຈົ້ານ້ອຍທ່າມກາງບັນດາປະຊາຊາດອື່ນໆ, ໃຫ້ເປັນທີ່ຫມິ່ນປະຫມາດທ່າມກາງມະນຸດ.
[16]ເພາະຄວາມຢ້ານກົວຂອງພວກເຈົ້າໄດ້ຫລອກລວງພວກເຈົ້າ, ທັງຄວາມອວດຕົວແຫ່ງໃຈຂອງພວກເຈົ້າ, ພວກເຈົ້າຜູ້ຊຶ່ງອາໄສຢູ່ໃນຖ້ຳຫີນ,
ເຈົ້າຜູ້ຍຶດຍອດພູເຂົາໄວ້ເອີຍ ແມ່ນພວກເຈົ້າເຮັດຮັງຂອງພວກເຈົ້າສູງເຫມືອນຢ່າງຮັງນົກອິນຊີ. ເຮົາຈະຍົກພວກເຈົ້າລົງມາຈາກບ່ອນນັ້ນ—
ພຣະຢາເວກ່າວດັ່ງນີ້ແຫລະ.
[17]ເອໂດມຈະກາຍເປັນຄວາມຢ້ານກົວຕໍ່ທຸກຄົນທີ່ຜ່ານໄປ. ຄົນພວກນັ້ນຈະເຍາະເຍີ້ຍເພາະໄພພິບັດທັງຫມົດຂອງມັນ.
[18]ເຫມືອນດັ່ງການທຳລາຍລ້າງເມືອງໂຊໂດມ ແລະເມືອງໂກໂມຣາ ແລະຫົວເມືອງໃກ້ຄຽງຂອງເຫລົ່ານັ້ນ,” ພຣະຢາເວກ່າວວ່າ,
“ບໍ່ມີໃຜຈະພັກຢູ່ບ່ອນນັ້ນ; ບໍ່ມີມະນຸດຄົນໃດຈະອາໄສໃນເມືອງນັ້ນ.
[19]ເບິ່ງແມ, ລາວຈະຂຶ້ນມາເຫມືອນໂຕສິງຈາກດົງລຸ່ມແມ່ນ້ຳຢໍແດນໂດດເຂົ້າໄປໃນທົ່ງຫຍ້າຂຽວສົດ
ເພາະເຮົາຈະຮີບເຮັດໃຫ້ເອໂດມຫນີໄປຈາກເມືອງນັ້ນ ແລະເຮົາຈະແຕ່ງຕັ້ງບາງຄົນຜູ້ທີ່ເລືອກສັນໄວ້ໃຫ້ເບິ່ງແຍງເມືອງນັ້ນ,
ເພາະມີໃຜເປັນຢ່າງເຮົາ ແລະໃຜຈະທົນຢືນຢູ່ຕໍ່ຫນ້າເຮົາໄດ້? ຜູ້ລ້ຽງແກະຄົນໃດທີ່ສາມາດຕໍ່ຕ້ານເຮົາໄດ້?
[20]“ເພາະສະນັ້ນ ຈົ່ງຟັງແຜນການຊຶ່ງພຣະຢາເວຊົງເຮັດໄວ້ຕໍ່ສູ້ເມືອງເອໂດມ, ບັນດາພຣະປະສົງຊຶ່ງພຣະອົງໄດ້ດຳລິຂຶ້ນຕໍ່ສູ້ຊາວເມືອງເຕມານ,
ຄືເຖິງໂຕນ້ອຍທີ່ສຸດທີ່ຢູ່ໃນຝູງກໍຈະຕ້ອງຖືກລາກເອົາໄປ. ທົ່ງຫຍ້າຂຽວສົດທັງຫລາຍຂອງພວກເຂົາ ຈະຖືກປ່ຽນເປັນສະຖານທີ່ເພພັງ.
[21]ເມື່ອໄດ້ຍິນສຽງພວກເຂົາລົ້ມລົງທີ່ແຜ່ນດິນໂລກສັ່ນສະເທືອນ. ສຽງຮ້ອງຄາງຂອງມັນໄດ້ຍິນເຖິງທະເລແດງ.[22]ເບິ່ງແມ, ຜູ້ຫນຶ່ງຈະເຫາະຂຶ້ນ
ແລະ ເຈີດລົງເຫມືອນນົກອິນຊີ, ແລະກາງປີກຂອງມັນອອກສູ້ໂບຊະຣາ. ແລ້ວໃນມື້ນັ້ນ
ຈິດໃຈຂອງນັກຮົບແຫ່ງເອໂດມກໍຈະກາຍເປັນເຫມືອນຈິດໃຈຂອງຍິງເຈັບທ້ອງເກີດລູກ.”
[23]ກ່ຽວກັບເມືອງດາມາເຊ: “ເມືອງຮຳມາດ ແລະ ເມືອງອາປາດໄດ້ຮັບຄວາມຂາຍຫນ້າ, ເພາະພວກເຂົາໄດ້ຍິນຂ່າວຮ້າຍ.
ພວກເຂົາກໍຢ້ານກົວຕົວສັ່ນອ່ອນແຮງໄປ! ພວກເຂົາວຸ້ນວາຍເຫມືອນທະເລ, ທີ່ສະຫງົບລົງບໍ່ໄດ້.[24]ເມືອງດາມາເຊກໍອ່ອນເພຍ. ນາງຈະຫັນກັບ
ແລະຫນີໄປ; ເພາະຄວາມກົວໄດ້ຈັບຫຸ່ມນາງໄວ້ໃນເມືອງນັ້ນ. ຄວາມທຸກທໍລະມານໃຈ
ແລະຄວາມເສົ້າຍຶດນາງໄວ້ເຫມືອນກັບຜູ້ຍິງກຳລັງເກີດລູກ.[25]ເມືອງແຫ່ງການສັນລະເສີນ,
ເມືອງທີ່ເຕັມດ້ວຍຄວາມຊື່ນບານໄດ້ຖືກປະຖິ້ມແລ້ວນໍ?
[26]ເພາະສະນັ້ນຄົນຫນຸ່ມຂອງເມືອງນັ້ນຈະລົ້ມລົງໃນກາງເມືອງນັ້ນ, ແລະບັນດາທະຫານຂອງເມືອງນັ້ນຈະຖືກຕັດອອກໃນມື້ນັ້ນ—
ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.”[27]“ເພາະເຮົາຈະກໍໄຟຂຶ້ນໃນກຳແພງເມືອງດາມາເຊ,
ແລະໄຟນັ້ນຈະເຜົາຜານບັນດາທີ່ກຳບັງອັນເຂັ້ມແຂງຂອງເບັນຮາດັດເສຍ.”

[28]ກ່ຽວກັບເລືອງຄົນເກດາ ແລະອານາຈັກຮາໂຊ, ພຣະຢາເວກ່າວ ກັບເນບູກາດເນັດຊາດັ່ງນີ້ (ຕອນນີ້
ເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ກຳລັງໂຈມຕີ ສະຖານທີ່ເຫລົ່ານີ້) ວ່າ: “ຈົ່ງລຸກຂຶ້ນ ແລະຮີບເຂົ້າໄປສູ້ຄົນເກດາ
ແລະທຳລາຍປະຊາຊົນແຫ່ງຕາເວັນອອກເຫລົ່ານັ້ນເສຍ.[29]ເຕັ້ນທັງຫລາຍ ແລະ ຝູງແບ້ແກະຂອງພວກເຂົາຈະຖືກເອົາໄປ, ທັງຜ້າກັ້ງ
ແລະພາຊະນະທັງຫມົດຂອງພວກເຂົາ; ອູດຂອງພວກເຂົາຈະຖືກນຳເອົາໄປຈາກພວກເຂົາ, ແລະຄົນຈະຮ້ອງແກ່ເຂົາວ່າ,
“ຄວາມຕົກໃຈຢ້ານມີຢູ່ທຸກດ້ານ!”
[30]ຊາວເມືອງຮາໂຊເອີຍ, ຫນີເຖີດ! ຈົ່ງຫນີໄປໄກ ໄປອາໄສໃນບ່ອນເລິກ—ນີ້ເປັນຄຳປະກາດຂອງພຣະຢາເວ—
ເພາະເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ດຳລິແຜນການຕໍ່ສູ້ພວກເຈົ້າ ຈົ່ງຫນີໄປຈົ່ງຫັນກັບເສຍ.[31]ຈົ່ງລຸກຂຶ້ນ!
ມຸ່ງຫນ້າໄປສູ້ປະຊາຊາດຫນຶ່ງທີ່ຮັ່ງມີ, ຜູ້ຊຶ່ງອາໄສຢູ່ຢ່າງຫມັ້ນຄົງປອດໄພ,” ພຣະຢາເວກ່າວດັ່ງນີ້ແຫລະ. “ພວກເຂົາບໍ່ມີປະຕູເມືອງ
ແລະບໍ່ມີດານປະຕູໃດໆໃນເມືອງເຫລົ່ານັ້ນ, ແລະປະຊາຊົນຂອງເມືອງນັ້ນກໍອາໄສຢູ່ຢ່າງໂດດດ່ຽວ.
[32]ອູດຂອງພວກເຂົາຈະກາຍເປັນເຄື່ອງທີ່ປຸ້ນມາໄດ້ ແລະຊັບສິນບັດ ອັນຫລວງຫລາຍຂອງພວກເຂົາຈະເປັນເຄື່ອງທີ່ປຸ້ນມາຈາກສົງຄາມ.
ແລ້ວເຮົາຈະກະຈາຍພວກເຂົາໄປທຸກທິດລົມ ຄືຄົນທີ່ໂກນຜົມຈອນຫູຂອງພວກເຂົາ, ແລະເຮົາຈະນຳໄພພິບັດມາຈາກທຸກດ້ານຂອງພວກເຂົາ —
ນີ້ເປັນຄຳປະກາດຂອງພຣະຢາເວ.[33]ເມືອງຮາໂຊຈະເປັນບ່ອນອາໄສຂອງຫມາປ່າ, ເປັນບ່ອນຖິ້ມຮ້າງຢູ່ເປັນນິດ. ບໍ່ມີໃຜຈະພັກອາໄສຢູ່ບ່ອນນັ້ນ;
ບໍ່ມີມະນຸດຄົນໃດຈະອາໄສໃນນັ້ນ.”
[34]ນີ້ເປັນພຣະທັມຂອງພຣະຢາເວ ຊຶ່ງມາຍັງເຢເຣມີຢາຜູ້ປະກາດພຣະທັມກ່ຽວກັບເມືອງເອລາມ.
ໃນຕອນຕົ້ນລາຊະການເຊເດກີຢາກະສັດແຫ່ງຢູດາ, ແລະກ່າວວ່າ,[35]“ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ເບິ່ງແມ,
ເຮົາຈະຫັກຄັນທະນູຂອງເອລາມ, ຊຶ່ງເປັນຫົວໃຈແຫ່ງກຳລັງຂອງພວກເຂົາ.[36]ເພາະເຮົາຈະນຳລົມທັງສີ່ທິດຈາກທັງສີ່ສ່ວນຂອງທ້ອງຟ້າ,
ແລະເຮົາຈະເຮັດໃຫ້ຄົນເອລາມກະຈາຍພວກເຂົາໄປຕາມລົມເຫລົ່ານັ້ນທັງຫມົດ.
ຈະບໍ່ມີປະຊາຊາດທີ່ຜູ້ຖືກຂັບໄລ່ອອກໄປຈາກເອລາມຈະມາບໍ່ເຖິງ.
[37]ດ້ວຍວ່າເຮົາຈະເຮັດໃຫ້ເອລາມຢ້ານກົວຕໍ່ຫນ້າສັດຕູຂອງພວກເຂົາ ແລະຕໍ່ຫນ້າຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ.
ເພາະເຮົາຈະນຳເຫດຮ້າຍມາເຖິງພວກເຂົາ, ຄືຄວາມພິໂລດອັນແຮງກ້າ— ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ—
ແລະເຮົາຈະໃຊ້ໃຫ້ດາບໄລ່ຕາມພວກເຂົາທັງຫລາຍຢ່າງຫນັກ ຈົນກວ່າເຮົາຈະໄດ້ເຜົາຜານພວກເຂົາຈົນຫມົດສິ້ນ.
[38]ແລ້ວເຮົາຈະຕັ້ງພຣະທີ່ນັ່ງຂອງເຮົາໃນເອລາມ ແລະ ຈະທຳລາຍກະສັດ ແລະ ບັນດາພວກເຈົ້ານາຍຂອງເມືອງນັ້ນ—
ນີ້ເປັນຄຳປະກາດຂອງພຣະຢາເວ—[39]ແລະສິ່ງທີ່ຈະເກີດຂຶ້ນໃນພາຍຫລັງ ທີ່ເຮົາຈະໃຫ້ເອລາມກັບສູ່ສະພາບເດີມ—
ນີ້ເປັນຄຳປະກາດຂອງພຣະຢາເວ.”

 generated on Tue Jun 17 19:01:42 2025

50 1ນີ້ເປັນພຣະທັມຊຶ່ງພຣະຢາເວຊົງກ່າວກັບບາບີໂລນ, ກ່ຽວກັບແຜ່ນດິນຂອງຊາວເຄນເດຍ, ໂດຍເຢເຣມີຢາຜູ້ປະກາດພຣະທັມ ວ່າ,
2“ຈົ່ງປະກາດທ່າມກາງບັນດາປະຊາຊາດ ແລະໃຫ້ພວກເຂົາໄດ້ຍິນ. ຈົ່ງຕັ້ງທຸງຂຶ້ນ ປ່າວປະກາດ, ແລະຢ່າປິດບັງໄວ້ເລີຍ. ຈົ່ງກ່າວວ່າ,
‘ບາບີໂລນຖືກຍຶດແລ້ວ. ພະເບນກໍໄດ້ອັບອາຍ. ພະເມໂຣດັກກໍຖືກທຸບແຫລກເປັນປ່ຽງ. ຮູບເຄົາລົບທັງຫລາຍຂອງເມືອງນັ້ນຖືກເຮັດໃຫ້ອັບອາຍ;
ຮູບປັ້ນທັງຫລາຍກໍຖືກແຫລກເປັນປ່ຽງ.’

3ປະຊາຊາດຫນຶ່ງອອກຈາກທິດເຫນືອໄດ້ມາຕໍ່ສູ້ເມືອງນັ້ນ ຊຶ່ງຈະເຮັດໃຫ້ແຜ່ນດິນຂອງນາງເປັນທີ່ຮົກຮ້າງ. ຈະບໍ່ມີຈັກຄົນຫນຶ່ງອາໄສໃນນັ້ນ,
ທັງມະນຸດແລະສັດຈະຫນີໄປຫມົດ.4ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ, ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ ປະຊາຊົນອິດສະຣາເອນ
ແລະປະຊາຊົນຢູດາຈະມາລວມກັນເພື່ອໄປດ້ວຍກັນຮ້ອງໄຫ້ຮ່ຳໄຮ ແລະສະແຫວງຫາພຣະຢາເວພຣະເຈົ້າຂອງພວກເຂົາ.
5ພວກເຂົາຈະຖາມຫາທາງໄປຊີໂອນໂດຍຫັນຫນ້າຊື່ໄປເມືອງນັ້ນ, ກ່າວວ່າ, ພວກເຮົາຈະໄປ
ແລະຕິດສະນິດກັບພຣະຢາເວໂດຍເຮັດຄຳຫມັ້ນສັນຍາຕະຫລອດໄປເປັນນິດ ຊຶ່ງຈະບໍ່ລືມເລີຍ.”
6ປະຊາຊົນຂອງເຮົາເປັນຝູງແກະທີ່ຫລົງຫາຍ. ບັນດາຜູ້ລ້ຽງຂອງພວກເຂົາໄດ້ພາເຂົາຫລົງໄປ
ພວກເຂົາໄປເທິງພູເຂົາຫນ່ວຍນີ້ໄປຫາພູເຂົາອີກຫນ່ວຍຫນຶ່ງ; ພວກເຂົາໄປແລ້ວ, ພວກເຂົາໄດ້ລືມຄອກເກົ່າ,
ຊຶ່ງພວກເຂົາເຄີຍໄດ້ອາໄສເສຍແລ້ວ.7ບັນດາຜູ້ທີ່ໄດ້ພົບພວກເຂົາ ກໍໄດ້ລ້າງຜານພວກເຂົາ. ພວກສັດຕູຂອງພວກເຂົາໄດ້ກ່າວວ່າ,
‘ພວກເຮົາບໍ່ມີຄວາມຜິດ, ເພາະພວກເຂົາທັງຫລາຍໄດ້ເຮັດບາບຕໍ່ພຣະຢາເວ ຜູ້ເປັນທີ່ຢູ່ອັນທ່ຽງທຳຂອງພວກເຂົາ—
ຜູ້ຊຶ່ງເປັນຄວາມຫວັງຂອງບັນພະບູລຸດຂອງພວກເຂົາ.’
8ຈົ່ງຫນີຈາກທ່າມກາງບາບີໂລນ; ຈົ່ງອອກໄປເສຍຈາກແຜ່ນດິນຂອງຊາວເຄນເດຍ; ເປັນເຫມືອນແບ້ໂຕຜູ້ນຳຫນ້າຝູງທີ່ຍັງເຫລືອຢູ່.9ເພາະ
ເບິ່ງແມ, ເຮົາຈະປັ່ນປ່ວນ ແລະ ນຳບັນດາປະຊາຊາດໃຫຍ່ຫມູ່ຫນຶ່ງຈາກປະເທດເຫນືອ ມາຕໍ່ສູ້ກັບບາບີໂລນ.
ພວກເຂົາຈະລຳລຽງກັນມາຕໍ່ສູ້ກັບນາງ. ບາບີໂລນຈະຖືກຈັບໄປເປັນຊະເລີຍຈາກທີ່ນັ້ນ.
ລູກທະນູຂອງພວກເຂົາທັງຫລາຍກໍເຫມືອນນັກຮົບທີ່ຊຳນານ ບໍ່ມີຄົນໃດຈະກັບໄປມືເປົ່າ.10ເຄນເດຍຈະກາຍເປັນຂອງທີ່ຖືກປຸ້ນມາໄດ້.
ບັນດາຜູ້ທີ່ປຸ້ນນາງຈະອີ່ມຫນຳສຳລານ—ນີ້ເປັນຄຳປະກາດຂອງພຣະຢາເວ ວ່າ,
11ເຈົ້າປິຕິຍິນດີ, ພວກເຈົ້າສະຫລອງສິ່ງຂອງທີ່ປຸ້ນມາໄດ້ຈາກມໍຣະດົກຂອງເຮົາ; ເຈົ້າຈະກະໂດດໄປຮອບໆ
ເຫມືອນດັ່ງລູກງົວໂດດເຕັ້ນຢູ່ທີ່ທົ່ງຫຍ້າ. ເຈົ້າຮ້ອງເຫມືອນມ້າທີ່ເຕັ້ນລຳດ້ວຍກຳລັງ.12ເພາະແມ່ຂອງພວກເຈົ້າຈະອັບອາຍຢ່າງທີ່ສຸດ.
ນາງທີ່ເກີດພວກເຈົ້າຈະຂາຍຫນ້າ. ເບິ່ງແມ, ເຈົ້າຈະເປັນຜູ້ມີຄວາມສຳຄັນຫນ້ອຍທີ່ສຸດໃນບັນດາປະຊາຊາດ ຈະເປັນຖິ່ນແຫ້ງແລ້ງກັນດານ
ບ່ອນແຫ້ງແລ້ງ ແລະທະເລຊາຍ.13ເພາະຄວາມໂກດຮ້າຍຂອງພຣະຢາເວ ບາບີໂລນຈະບໍ່ເປັນທີ່ຄົນຢູ່ອາໄສ,
ແຕ່ຈະຖືກເປັນຮົກຮ້າງຢ່າງຫມົດສິ້ນ. ທຸກຄົນທີ່ຜ່ານເມືອງບາບີໂລນໄປກໍຈະປະຫລາດໃຈ
ແລະຈະເຍາະເຍີ້ຍເພາະໄພພິບັດທັງຫມົດຂອງເມືອງນັ້ນ.
14ຈົ່ງຕຽມຕົວຂອງພວກເຈົ້າທັງຫລາຍເຂົ້າມາສູ້ບາບີໂລນໃຫ້ຮອບດ້ານ. ທຸກຄົນທີ່ໂກ່ງຄັນທະນູຈົ່ງຍິງນາງ. ຢ່າເສຍດາຍລູກທະນູທັງຫລາຍ,
ເພາະນາງໄດ້ເຮັດບາບຕໍ່ພຣະຢາເວ.15ຈົ່ງເປັ່ງສຽງໂຫ່ຮ້ອງສູ້ນາງໃຫ້ຮອບດ້ານ! ນາງຍອມພ່າຍແພ້ແລ້ວ; ຮາກຖານຂອງນາງລົ້ມລົງແລ້ວ;
ກຳແພງຂອງນາງຖືກເພພັງແລ້ວ, ເພາະນີ້ເປັນການແກ້ແຄ້ນຂອງພຣະຢາເວ. ຈົ່ງເຮັດການແກ້ແຄ້ນນາງ!
ເຮັດກັບນາງເຫມືອນທີ່ນາງໄດ້ເຮັດມາແລ້ວ!
16ຈົ່ງຕັດຜູ້ຫວ່ານອອກຈາກບາບີໂລນ ແລະຕັດຜູ້ທີ່ຖືກ່ຽວໃນລະດູກ່ຽວ ເຫດເພາະດາບຂອງຜູ້ບີບບັງຄັບທຸກຄົນຈົ່ງຫັນເຂົ້າຫາຊົນຊາດຂອງຕົນ.
ໃຫ້ແຕ່ລະຄົນຈະຫນີໄປຍັງແຜ່ນດິນຂອງຕົນ.
17ອິດສະຣາເອນເປັນເຫມືອນແກະທີ່ຖືກກະຈັດກະຈາຍໄປ ແລ້ວພວກໂຕສິງໄດ້ລ່າພວກເຂົາໄປ. ທຳອິດກະສັດອັດຊີເຣຍໄດ້ລ້າງຜານລາວ,
ແລ້ວຕໍ່ມາຄັ້ງນີ້ ເນບູກາດເນັດຊາ ກະສັດແຫ່ງບາບີໂລນໄດ້ຫັກກະດູກຂອງລາວ.18ເພາະສະນັ້ນ ພຣະຢາເວຈອມໂຍທາ,
ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຈະລົງໂທດກະສັດແຫ່ງບາບີໂລນ ແລະແຜ່ນດິນຂອງລາວ,
ດັ່ງທີ່ເຮົາໄດ້ລົງໂທດກະສັດແຫ່ງອັດຊີເຣຍ.
19ເຮົາຈະໃຫ້ອິດສະຣາເອນກັບສູ່ເດີ່ນຫຍ້າຂອງຕົນ. ພວກເຂົາຈະກິນຢູ່ເທິງກາເມນ ແລະ ໃນບາຊານ ແລ້ວຈະອີ່ມໃຈເທິງໂນນພູເອຟຣາອິມ
ແລະ ໃນກີເລອາດ.20ພຣະຢາເວກ່າວວ່າ ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ, ພຣະຢາເວກ່າວວ່າ, ຈະຫາຄວາມຊົ່ວຊ້າໃນອິດສະຣາເອນ,
ແຕ່ຈະຫາບໍ່ໄດ້ເລີຍ. ເຮົາຈະຫາບາບໃນຢູດາກໍຫາບໍ່ໄດ້, ເພາະເຮົາຈະໃຫ້ອະໄພແກ່ຊົນເຫລົ່ານັ້ນຜູ້ທີ່ເຮົາຍັງເຫລືອຢູ່ທີ່ເຮົາຍັງໄວ້ຊີວິດ.”
21“ຈົ່ງຂຶ້ນໄປສູ້ແຜ່ນດິນເມຣາທາຢິມ, ຈົ່ງຕໍ່ສູ້ຊາວເມືອງເປໂກດ ແລະພວກຄົນທີ່ອາໄສຢູ່ໃນເປໂຂດ. ຈົ່ງຂ້າພວກເຂົາດ້ວຍດາບ ແລະ
ແຍກພວກເຂົາໄວ້—ນີ້ເປັນການປະກາດຂອງພຣະຢາເວ—ສຳລັບການທຳລາຍທຸກຢ່າງຕາມທີ່ເຮົາໄດ້ບັນຊາພວກເຈົ້າ.
22ສຽງສົງຄາມຢູ່ໃນແຜ່ນດິນ ແລະ ສຽງການທຳລາຍຢ່າງໃຫຍ່ຫລວງກໍຢູ່ໃນແຜ່ນດິນນັ້ນ.
23ຄ້ອນແຫ່ງແຜ່ນດິນໂລກທັງຫມົດໄດ້ຖືກຕັດລົງ ແລະ ຖືກຫັກເສຍແລ້ວນໍ.
ບາບີໂລນໄດ້ກາຍເປັນບ່ອນວ່າງເປົ່າທ່າມກາງບັນດາປະຊາຊາດແລ້ວນໍ.24ບາບີໂລນເອີຍ, ເຮົາວາງບ້ວງແຮ້ວດັກພວກເຈົ້າ,
ແລະພວກເຈົ້າກໍຕິດບ້ວງແຮ້ວນັ້ນ ແລະພວກເຈົ້າບໍ່ຮູ້ເລື່ອງ! ພວກເຂົາໄດ້ມາພົບພວກເຈົ້າ ແລະ ໄດ້ຈັບພວກເຈົ້າໄປເປັນຊະເລີຍ,
ເພາະພວກເຈົ້າໄດ້ຕໍ່ສູ້ກັບພຣະຢາເວ.
25ພຣະຢາເວໄດ້ຊົງເປີດຄັງອາວຸດຂອງພຣະອົງ ແລະຊົງນຳອາວຸດອອກມາເພື່ອໃຫ້ເຮັດຕາມຄວາມໂກດຮ້າຍຂອງພຣະອົງ.
ເພາະນີ້ແຫລະເປັນພຣະລາຊະກິດແຫ່ງອົງພຣະຢາເວພຣະເຈົ້າຈອມໂຍທາໃນແຜ່ນດິນແຫ່ງຊາວເຄນເດຍ.26ຈົ່ງມາໂຈມຕີກັບນາງຈາກແດນໄກ.
ຈົ່ງເປີດບັນດາສາງຂອງນາງ. ຈົ່ງກອງນາງໄວ້ເຫມືອນຢ່າງກອງເຂົ້າ ແລະຈົ່ງແຍກນາງເພື່ອການທຳລາຍເສຍຈົນຫມົດສິ້ນ ຢ່າໃຫ້ມີຄົນເຫລືອຢູ່.
27ຈົ່ງຂ້າບັນດາງົວເຖິກຂອງນາງໃຫ້ຫມົດໃຫ້ມັນທັງຫລາຍ. ຈົ່ງສົ່ງພວກມັນລົງໄປຍັງສະຖານທີ່ແຫ່ງການປະຫານ. ວິບັດແກ່ມັນທັງຫລາຍ,
ເພາະວັນເວລາຂອງມັນມາເຖິງແລ້ວ— ຄືເວລາແຫ່ງການລົງໂທດ.28ມີສຽງຂອງພວກເຂົາທີ່ໄດ້ຫນີໄປ, ສຽງຂອງບັນຄົນທີ່ລອດຊີວິດ,
ຈາກແຜ່ນດິນບາບີໂລນ. ຄົນເຫລົ່ານັ້ນຈະໄປປະກາດການແກ້ແຄ້ນຂອງພຣະຢາເວພຣະເຈົ້າຂອງເຮົາໃນຊີໂອນ,
ແລະການແກ້ແຄ້ນໃຫ້ກັບພຣະວິຫານຂອງພຣະອົງ.”

[29]“ຈົ່ງເອີ້ນນັກທະນູມາຕໍ່ສູ້ກັບບາບີໂລນ—ຄືບັນດາຄົນທີ່ໂກ່ງທະນູ. ຈົ່ງຕັ້ງຄ້າຍໄວ້ຮອບມັນ, ແລະຢ່າໃຫ້ຜູ້ໃດຫນີລອດພົ້ນໄປໄດ້.
ຈົ່ງເຮັດກັບນາງຕາມການກະທຳຂອງນາງ. ຈົ່ງເຮັດແກ່ນາງເຫມືອນທີ່ນາງໄດ້ເຮັດແລ້ວ ຈົ່ງເຮັດກັບນາງດ້ວຍເຄື່ອງພອງທີ່ນາງເຄີຍໃຊ້.
ເພາະນາງຈອງຫອງລອງດີກັບພຣະຢາເວ, ພຣະອົງຜູ້ບໍລິສຸດແຫ່ງອິດສະຣາເອນ.[30]ເພາະສະນັ້ນຄົນຫນຸ່ມຂອງນາງຈະລົ້ມລົງຕາມຖະຫນົນ
ແລະ ທະຫານຂອງນາງທັງຫມົດຈະຖືກຕັດອອກໃນມື້ນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ.”
[31]“ເບິ່ງແມ, ເຮົາຕໍ່ສູ້ກັບພວກເຈົ້າ, ຜູ້ຈອງຫອງເອີຍ—ອົງພຣະຢາເວພຣະເຈົ້າຈອມໂຍທາກ່າວວ່າ—
ເພາະວ່າວັນເວລາຂອງພວກເຈົ້າມາເຖິງແລ້ວ ຄືເວລາທີ່ເຮົາຈະລົງໂທດພວກເຈົ້າ.[32]ຜູ້ຈອງຫອງຈະສະດຸດ ແລະລົ້ມລົງ.
ຈະບໍ່ມີຜູ້ໃດຍົກລາວຂຶ້ນໄດ້ ແລະເຮົາຈະກໍ່ໄຟໃນບັນດາຫົວເມືອງຂອງລາວ ແລະໄຟຈະເຜົາຜານທຸກສິ່ງທີ່ຢູ່ອ້ອມຮອບເມືອງນັ້ນ.
[33]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ປະຊາຊົນອິດສະຣາເອນຖືກບີບບັງຄັບ, ພ້ອມກັນບັນດາປະຊາຊົນຢູດາ.
ຜູ້ທີ່ຈັບພວກເຂົາໄປເປັນຊະເລີຍພວກເຂົາໄດ້ຍຶດໄວ້ຫມັ້ນ; ທັງປະຕິເສດບໍ່ຍອມໃຫ້ພວກເຂົາໄປ.[34]ພຣະຜູ້ໄຖ່ຂອງພວກເຂົານັ້ນເຂັ້ມແຂງ.
ພຣະນາມຂອງພຣະອົງຄືພຣະຢາເວຈອມໂຍທາ. ພຣະອົງຈະຊົງແກ້ຄະດີ, ເພື່ອພຣະອົງຈະປະທານຄວາມສະຫງົບແກ່ແຜ່ນດິນ,
ແຕ່ຈະປະທານຄວາມບໍ່ສະຫງົບແກ່ຊາວເມືອງບາບີໂລນ.
[35]ໃຫ້ດາບຢູ່ເຫນືອຊາວເຄນເດຍ — ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ—ແລະເຫນືອຊາວເມືອງບາບີໂລນ, ເຫນືອພວກເຈົ້ານາຍ,
ກັບນັກປາດຂອງນາງ.[36]ໃຫ້ດາບຈະມາຕໍ່ສູ້ເພື່ອພວກເຂົາກ່າວຄຳທຳນວຍ, ເພື່ອທີ່ພວກເຂົາຈະກາຍເປັນຄົນໂງ່.
ໃຫ້ດາບຢູ່ເຫນືອບັນດານັກຮົບຂອງນາງ, ເພື່ອພວກເຂົາຈະເຕັມໄປດ້ວຍຄວາມຢ້ານກົວ.[37]ໃຫ້ດາບຢູ່ເຫນືອມ້າທັງຫລາຍຂອງພວກເຂົາ,
ບັນດາລົດຮົບຂອງພວກເຂົາ ແລະໃຫ້ຢູ່ເຫນືອຄົນຕ່າງດ້າວທ່າມກາງພວກເຂົາ, ເພື່ອພວກເຂົາຈະກາຍເປັນຜູ້ຍິງໄປ.
ໃຫ້ດາບຢູ່ເຫນືອຊັບສົມບັດທັງຫມົດຂອງພວກເຂົາ, ເພື່ອວ່າຊັບສົມບັດນັ້ນຈະຖືກປຸ້ນເສຍ.
[38]ຄວາມແຫ້ງແລ້ງຢູ່ເຫນືອນ້ຳທັງຫລາຍຂອງນາງ ເພື່ອນ້ຳທັງຫລາຍນັ້ນຈະໄດ້ແຫ້ງໄປ. ເພາະເປັນແຜ່ນດິນແຫ່ງຮູບເຄົາລົບ,
ແລະພວກເຂົາທັງຫລາຍກໍບ້າຮູບນັ້ນ.[39]ເພາະສະນັ້ນ ບັນດາສັດປ່າທັງຫລາຍ ພ້ອມກັບບັນດາຫມາຈິ້ງຈອກຈະອາໄສຢູ່ໃນທີ່ນັ້ນ
ແລະພວກນົກກະຈອກເທດຫນຸ່ມຈະອາໄສຢູ່ໃນທີ່ນັ້ນ. ເພາະເມືອງນັ້ນຈະບໍ່ມີປະຊາຊົນຢູ່ອີກຕໍ່ໄປເປັນນິດ
ຄືບໍ່ມີຊາວເມືອງອາໄສຢູ່ຕະຫລອດຊົ່ວນິລັນດອນ.[40]ເຊັ່ນດຽວກັບທີ່ພຣະເຈົ້າໄດ້ຊົງລົ້ມສະລາຍເມືອງໂຊໂດມ ແລະເມືອງໂກໂມຣາ
ແລະຫົວເມືອງໃກ້ຄຽງເຫລົ່ານັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—ດັ່ງນັ້ນຈະບໍ່ມີຄົນພັກອາໄສຢູ່ບ່ອນນັ້ນ
ແລະບໍ່ມີມະນຸດຄົນໃດອາໄສຢູ່ໃນເມືອງນັ້ນ.”
[41]“ເບິ່ງແມ, ຊົນຊາດຫນຶ່ງຈະມາຈາກທິດເຫນືອ ປະຊາຊາດອັນເຂັ້ມແຂງຊາດຫນຶ່ງ
ແລະກະສັດຫລາຍອົງຈະຖືກນຳໃຫ້ມາຈາກດິນແດນໄກທີ່ສຸດຂອງແຜ່ນດິນໂລກ.[42]ພວກເຂົາຈະຈັບຄັນທະນູ ແລະຫອກ ພວກເຂົາໂຫດຮ້າຍ
ແລະຈະບໍ່ມີຄວາມກະລຸນາ ສຽງຂອງພວກເຂົາຈະເຫມືອນສຽງທະເລຄະນອງ ພວກເຂົາຈະຂີ່ມ້າ
ລຳລຽງກັນເຂົ້າສູ່ສົງຄາມກັບພວກເຈົ້າລູກສາວແຫ່ງບາບີໂລນເອີຍ.[43]ກະສັດແຫ່ງບາບີໂລນໄດ້ຍິນຂ່າວເລື່ອງນັ້ນ
ແລະພຣະຫັດຂອງພຣະອົງກໍອ່ອນລົງ ຄວາມທຸກໃຈຈັບຫົວໃຈລາວ ເຈັບປວດເຫມືອນຜູ້ຍິງກຳລັງເກີດລູກ.
[44]ບິ່ງແມ, ສັດຕູຈະຂຶ້ນມາເຫມືອນໂຕສິງຈາກທີ່ສູງຂອງແມ່ນ້ຳຢໍແດນ ໄປຍັງທົ່ງລ້ຽງສັດທີ່ຄົງຢູ່ຕະລອດໄປ
ເພາະຮົາຈະເຮັດໃຫ້ພວກເຂົາຫນີໄປຈາກນາງໂດຍໄວ
ແລະເຮົາຈະຕັ້ງບາງຄົນເປັນຜູ້ທີ່ເລືອກສັນໄວ້ໃຫ້ເປັນຜູ້ດູແລເມືອງນັ້ນເພາະໃຜເປັນເຫມືອນເຮົາບໍ ແລະໃຜຈະຮ້ອງຟ້ອງເຮົາ?
ຜູ້ລ້ຽງແກະຄົນໃດຈະທົນຢືນຢູ່ຕໍ່ຫນ້າເຮົາໄດ້?
[45]ເພາະສະນັ້ນຈົ່ງຟັງແຜນການຊຶ່ງພຣະຢາເວຊົງວາງໄວ້ຕໍ່ສູ້ບາບີໂລນ ແລະບັນດາແຜນງານເຫລົ່ານັ້ນ
ທີ່ພຣະປະສົງໄດ້ຊົງວາງແຜນໄວ້ຕໍ່ສູ້ກັບແຜ່ນດິນຂອງຊາວເຄນເດຍ. ພວກເຂົາຈະຕ້ອງຖືກລາກໄປຢ່າງແນ່ນອນ
ເຖິງແມ່ນວ່າຈະເປັນຝູງເລັກນ້ອຍທີ່ສຸດກໍຕາມ ທົ່ງຫຍ້າຂອງພວກເຂົາຈະກາຍເປັນສາກຫັກພັງ.[46]ແຜ່ນດິນໂລກສັ່ນສະເທືອນ
ເພາະສຽງໄດ້ຍິນສຽງແຫ່ງໄຊຊະນະຕໍ່ບາບີໂລນ ແລະສຽງຮ້ອງຄາງດ້ວຍຄວາມທຸກຂອງພວກເຂົາດັງໄປທ່າມກາງບັນດາປະຊາຊາດ.”


generated on Tue Jun 17 19:01:42 2025

51 [1]“ພຣະຢາເວກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຈະປຸກກະແສລົມແຫ່ງການທຳລາຍ ຕໍ່ສູ້ກັບບາບີໂລນ
ແລະຕໍ່ສູ້ກັບບັນດາຄົນທີ່ອາໄສຢູ່ໃນເລັບຄາມາຍ.[2]ເຮົາຈະສົ່ງຄົນຕ່າງຊາດໄປຍັງບາບີໂລນ
ພວກເຂົາຈະເຮັດໃຫ້ແຜ່ນດິນນັ້ນກະຈັດກະຈາຍໄປ ແລະ ວ່າງເປົ່າເສຍ ເມື່ອພວກເຂົາມາຕໍ່ສູ້ອ້ອມນາງໄວ້ທຸກດ້ານ
ໃນວັນແຫ່ງຄວາມຍາກລຳບາກ.

[3]ຢ່າໃຫ້ນັກທະນູໂກ່ງຄັນທະນູຂອງພວກເຂົາ; ຢ່າໃຫ້ເຂົາສວມເສື້ອເກາະ. ຢ່າໄວ້ຊີວິດຄົນຫນຸ່ມຂອງເມືອງນັ້ນ
ຈົ່ງແຍກກອງທັບທັງຫມົດຂອງເມືອງນັ້ນໄວ້ແກ່ການທຳລາຍ.[4]ເພາະຄົນທີ່ບາດເຈັບຈະຖືກຂ້າລົ້ມລົງໃນແຜ່ນດິນຂອງຊາວເຄນເດຍ;
ຄົນເຫລົ່ານັ້ນທີ່ຖືກຂ້າຈະລົ້ມລົງຕາມຖະຫນົນຂອງເມືອງນັ້ນ.
[5]ເພາະວ່າອິດສະຣາເອນ ແລະຢູດາບໍ່ໄດ້ຖືກປະຖິ້ມໂດຍພຣະເຈົ້າຂອງພວກເຂົາ ພຣະຢາເວຈອມໂຍທາ,
ເຖິງແມ່ນແຜ່ນດິນຂອງພວກເຂົາເຕັມດ້ວຍຄວາມຜິດບາບຕໍ່ອົງບໍລິສຸດແຫ່ງອິດສະຣາເອນ.[6]ຈົ່ງຫນີເສຍຈາກທ່າມກາງບາບີໂລນ;
ໃຫ້ທຸກຄົນເອົາຊີວິດລອດສາ. ຢ່າພິນາດໄປໃນການລົງໂທດຄວາມຊົ່ວຊ້າຂອງເມືອງນັ້ນ. ເພາະນີ້ເປັນເວລາແຫ່ງການແກ້ແຄ້ນແຫ່ງພຣະຢາເວ.
ພຣະອົງຈະຊົງຕອບແທນທຸກຢ່າງຕໍ່ເມືອງນັ້ນ.
[7]ບາບີໂລນໄດ້ເຄີຍເປັນຈອກທອງຄຳໃນພຣະຫັດຂອງພຣະຢາເວ ທີ່ໄດ້ເຮັດໃຫ້ແຜ່ນດິນໂລກທັງຫມົດມຶນເມົາ;
ບັນດາປະຊາຊາດໄດ້ດື່ມເຫລົ້າອະງຸ່ນຂອງເມືອງນັ້ນ ແລະກາຍເປັນບ້າໄປ.[8]ບາບີໂລນໄດ້ລົ້ມລົງ ແລະແຕກໄປຢ່າງໄວວາ.
ຈົ່ງຮ້ອງຄາງເພື່ອນາງສາ! ຈົ່ງເອົາຫວ້ານຢາມາໃຫ້ນາງ ເພື່ອຊ່ວຍບັນເທົາຄວາມເຈັບປວດຂອງນາງ;
ບາງທີນາງອາດຈະໄດ້ຮັບການຮັກສາໃຫ້ຫາຍກໍໄດ້.
[9]‘ພວກເຮົາທັງຫລາຍຢາກຈະຮັກສາບາບີໂລນໃຫ້ຫາຍ, ແຕ່ນາງບໍ່ເຊົາ. ໃຫ້ພວກເຮົາປະຖິ້ມນາງໄວ້, ແລະໄປຍັງປະເທດຂອງຕົນ.
ເພາະວ່າຄວາມຜິດຂອງນາງພູນຂຶ້ນໄປເຖິງທ້ອງຟ້າ; ມັນກອງຂຶ້ນສູງໄປເຖິງເມກ.[10]ພຣະຢາເວຊົງນຳຄວາມຊອບທຳອອກມາໃຫ້ເຮົາ. ມາແມ,
ໃຫ້ເຮົາປະກາດພຣະລາຊະກິດຂອງພຣະຢາເວພຣະເຈົ້າຂອງເຮົາໃນຊີໂອນ.’
[11]ຈົ່ງຝົນລູກທະນູເຫລົ່ານັ້ນ ແລະ ຈົ່ງຈັບເອົາໂລ່ຂຶ້ນມາ. ພຣະຢາເວຊົງເລົ້າໂລມໃຈບັນດາກະສັດຄົນເມເດຍໃນແຜນການທຳລາຍບາບີໂລນ
ນີ້ເປັນການແກ້ແຄ້ນຂອງພຣະຢາເວ, ຄືການແກ້ແຄ້ນໃຫ້ກັບການທຳລາຍພຣະວິຫານຂອງພຣະອົງ.[12]ຈົ່ງປັກທຸງຕິດບັນດາກຳແພງຂອງບາບີໂລນ
ຈົ່ງເຮັດຄົນເຝົ້າໃຫ້ເຂັ້ມແຂງ; ຈົ່ງຕັ້ງຄົນຍາມຂຶ້ນ; ຈົ່ງຕຽມກອງດັກຊຸ່ມໄວ້;
ເພາະອົງພຣະຜູ້ເປັນເຈົ້າຈະຊົງເຮັດຕາມສິ່ງທີ່ພຣະອົງຊົງລັ່ນພຣະຄຳກ່ຽວກັບຊາວເມືອງບາບີໂລນ.
[13]ພວກເຈົ້າຜູ້ອາໄສຕາມນ້ຳຍືດຍາວ, ຜູ້ມີສົມບັດຫລວງຫລາຍເອີຍ ອະວະສານຂອງພວກເຈົ້າ, ບັດນີ້ໄດ້ມາເຖິງແລ້ວ.
ເສັ້ນຄວາມໂລບຂອງພວກເຈົ້າໄດ້ຖືກຕັດຂາດເສຍແລ້ວ.
[14]ພຣະຢາເວຈອມໂຍທາໄດ້ຊົງປະຕິຍານພຣະອົງເອງວ່າ,‘ເຮົາຈະໃຫ້ພວກສັດຕູຂອງພວກເຈົ້າຢູ່ເຕັມເມືອງຂອງເຈົ້າ,
ເຫມືອນກັບໄພພິບັດຈາກຕັກແຕນ; ພວກເຂົາທັງຫລາຍຈະເປັ່ງສຽງໂຫ່ຮ້ອງມີໄຊເຫນືອພວກເຈົ້າ.’
[15]ພຣະອົງຊົງສ້າງແຜ່ນດິນໂລກດ້ວຍລິດເດດຂອງພຣະອົງ; ພຣະອົງຊົງສະຖາປະນາພິພົບໄວ້ດ້ວຍພຣະສະຕິປັນຍາຂອງພຣະອົງ.
ດ້ວຍຄວາມເຂົ້າໃຈຂອງພຣະອົງຊົງແຜ່ທ້ອງຟ້າອອກ.[16]ເມື່ອພຣະອົງຊົງເປັ່ງພຣະສຸລະສຽງກໍມີສຽງນ້ຳຄະນອງໃນທ້ອງຟ້າ,
ເພາະພຣະອົງໄດ້ຊົງເຮັດໃຫ້ຫມອກຟູຂຶ້ນຈາກປາຍໂລກ. ພຣະອົງຊົງເຮັດຟ້າແລບເພື່ອຝົນ ແລະຊົງນຳລົມມາຈາກພຣະຄັງຂອງພຣະອົງ.
[17]ມະນຸດທຸກຄົນໂຫດຮ້າຍໃນທາງຄວາມຮູ້ຂອງຕົນ, ຊ່າງທອງທຸກຄົນຈະໄດ້ອັບອາຍເພາະຮູບເຄົາລົບຂອງຕົນ
ເພາະຮູບເຄົາລົບໂລຫະຫລໍ່ຂອງຕົນເປັນຂອງບໍ່ຈິງ ແລະບໍ່ມີລົມຫາຍໃຈໃນຮູບເຄົາລົບນັ້ນ.[18]ມັນເປັນຂອງບໍ່ມີຄ່າ
ແລະເປັນຜົນງານຂອງຄົນມັກເຍາະເຍີ້ຍພວກມັນຈະຕ້ອງຈິບຫາຍເມື່ອເຖິງເວລາແຫ່ງການລົງໂທດພວກມັນ.[19]ແຕ່ພຣະເຈົ້າສ່ວນຂອງຢາໂຄບ,
ບໍ່ເຫມືອນສິ່ງເຫລົ່ານີ້, ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ. ອິດສະຣາເອນເປັນຕະກູນທີ່ເປັນມໍຣະດົກຂອງພຣະອົງ;
ພຣະຢາເວຈອມໂຍທາເປັນພຣະນາມຂອງພຣະອົງ.
[20]ເຈົ້າເປັນຄ້ອນແຫ່ງສົງຄາມ ເປັນຍຸດໂທອຸປະກອນຂອງເຮົາ. ເຮົາຈະໃຊ້ເຈົ້າຕີບັນດາປະຊາຊາດໃຫ້ມຸ່ນເປັນຊິ້ນດ້ວຍພວກເຈົ້າ
ເຮົາຈະທຳລາຍຣາຊະອານາຈັກທັງຫລາຍດ້ວຍພວກມັນ.[21]ເຮົາຈະໃຊ້ເຈົ້າທຸບມ້າທັງຫລາຍ ແລະບັນດາຄົນຂີ່ໃຫ້ແຕກເປັນປ່ຽງໆ;
ເຮົາຈະໃຊ້ເຈົ້າຕີບັນດາລົດຮົບ ແລະບັນດາຄົນໃຫ້ເປັນມຸ່ນທະລາຍໄປເປັນປ່ຽງໆ.
[22]ເຮົາຈະຕີຜູ້ຊາຍ ແລະຜູ້ຍິງທຸກຄົນໃຫ້ແຕກເປັນປ່ຽງໆ; ເຮົາຈະໃຊ້ເຈົ້າຕີຄົນເຖົ້າ ແລະຄົນຫນຸ່ມໃຫ້ແຕກເປັນປ່ຽງໆ.
ເຮົາຈະໃຊ້ເຈົ້າຕີຄົນຫນຸ່ມ ແລະຍິງພົມມະຈາລີໃຫ້ແຕກເປັນປ່ຽງໆ.[23]ເຮົາຈະໃຊ້ເຈົ້າຕີຜູ້ລ້ຽງແກະ ແລະຝູງແກະໃຫ້ແຕກເປັນປ່ຽງໆ;
ເຮົາຈະໃຊ້ເຈົ້າຕີຊາວນາ ແລະງົວຄູ່ແອກຂອງພວກເຂົາໃຫ້ແຕກເປັນປ່ຽງໆ. ເຮົາຈະໃຊ້ເຈົ້າຕີພວກເຈົ້າເມືອງ ແລະຕັດໃຫ້ແຕກເປັນປ່ຽງໆ.
[24]ຕໍ່ຫນ້າຕໍ່ຕາເຈົ້າເຮົາຈະຕອບແທນບາບີໂລນ ແລະບັນດາຊາວເຄນເດຍທຸກຄົນ ເພາະຄວາມຊົ່ວຮ້າຍທັງສິ້ນທີ່ພວກເຂົາໄດ້ເຮັດໃນຊີໂອນ—
ນີ້ເປັນຄຳປະກາດຂອງພຣະຢາເວກ່າວວ່າ.
[25]ພູເຂົາຊຶ່ງທຳລາຍເອີຍ, ເບິ່ງແມ, ເຮົາຕໍ່ສູ້ພວກເຈົ້າ— ນີ້ເປັນຄຳປະກາດຂອງພຣະຢາເວ—ພວກເຈົ້າຜູ້ທຳລາຍແຜ່ນດິນໂລກທັງຫມົດ.
ເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ພວກເຈົ້າ ແລະກິ້ງພວກເຈົ້າລົງມາຈາກຫນ້າຜາເຫລົ່ານັ້ນ,
ແລະຈະເຮັດໃຫ້ພວກເຈົ້າເປັນພູເຂົາທີ່ຖືກໄຫມ້ລຸກຢູ່.[26]ດ້ວຍເຫດນີ້ ພວກເຂົາຈະບໍ່ເອົາຫີນຈາກພວກເຈົ້າໄປເຮັດສີລາຫົວມຸມຮາກຖານຂອງຕຶກ;
ເພາະພວກເຈົ້າຈະເປັນຂອງຖິ້ມຮ້າງເປັນນິດ—ພຣະຢາເວກ່າວດັ່ງນີ້ແຫລະ.
[27]ຈົ່ງຕັ້ງທຸງໄວ້ເທິງແຜ່ນດິນ. ຈົ່ງເປົ່າເຂົາສັດທ່າມກາງປະຊາຊາດທັງຫລາຍ. ຈົ່ງເອີ້ນຣາຊະອານາຈັກຕໍ່ໄປນີ້ມາສູ້ກັບນາງ: ອາຣາຣັດ, ມິນນີ,
ແລະອັດຊະເກນາດ. ຈົ່ງຕັ້ງຈອມທັບໄວ້ຕໍ່ສູ້ນາງ; ຈົ່ງນຳຝູງມ້າຂຶ້ນມາໃຫ້ຫລາຍເຫມືອນດັ່ງຝູງຕັກແຕນ.
[28]ຈົ່ງຕຽມບັນດາປະຊາຊາດມາເຮັດສົງຄາມກັບນາງ: ຄືຕຽມບັນດາກະສັດແຫ່ງເມເດຍ, ພ້ອມທັງພວກເຈົ້າເມືອງ ແລະຜູ້ປົກຄອງທັງຫລາຍ
ແລະທົ່ວທຸກແຜ່ນດິນພາຍໃຕ້ການປົກຄອງຂອງລາວ.
[29]ແຜ່ນດິນນັ້ນຈະສະທ້ານສະເທືອນ ແລະໂສກເສົ້າ, ເພາະບັນດາພຣະປະສົງຂອງພຣະຢາເວຕໍ່ບາບີໂລນຈະຕັ້ງຫມັ້ນຢູ່,
ເພື່ອຈະເຮັດໃຫ້ແຜ່ນດິນບາບີໂລນເປັນທີ່ຮົກຮ້າງເສຍປາດສະຈາກຄົນອາໄສ.


generated on Tue Jun 17 19:01:42 2025

[30]ນັກຮົບແຫ່ງບາບີໂລນຢຸດການສູ້ຮົບແລ້ວ ພວກເຂົາຄ້າງຢູ່ໃນທີ່ກຳບັງອັນເຂັ້ມແຂງຂອງຕົນ. ກຳລັງຂອງພວກເຂົາຫົດຖອຍເສຍແລ້ວ;
ພວກເຂົາກາຍເປັນເຫມືອນຜູ້ຍິງ—ບ້ານເຮືອນທັງຫລາຍຂອງນາງກໍຖືກໄຟໄຫມ້ແລ້ວ, ປະຕູຂອງນາງກໍຫັກ.
[31]ຜູ້ສົ່ງຂ່າວຄົນຫນຶ່ງແລ່ນໄປພົບຜູ້ສົ່ງຂ່າວອີກຄົນຫນຶ່ງ, ນັກແລ່ນຄົນຫນຶ່ງແລ່ນໄປພົບນັກແລ່ນອີກຄົນຫນຶ່ງ ເພື່ອເວົ້າກະສັດແຫ່ງບາບີໂລນວ່າ
ເມືອງຂອງພະອົງຖືກຍຶດໄວ້ທຸກດ້ານແລ້ວ.[32]ເພາະສະນັ້ນ ທ່າຂ້າມແມ່ນ້ຳກໍຖືກຍຶດແລ້ວ; ບ່ອນເປັນບຶງເປັນຫນອງກໍຖືກໄຟໄຫມ້,
ແລະບັນດາທະຫານຂອງບາບີໂລນກໍຕົກໃຈຢ້ານ.
[33]ເພາະພຣະຢາເວຈອມໂຍທາ, ພຣະເຈົ້າແຫ່ງອິດສະຣາເອນ, ກ່າວດັ່ງນີ້ວ່າ: ລູກສາວແຫ່ງບາບີໂລນກໍເຫມືອນລານນວດເຂົ້າ.
ເວລາທີ່ນາງຖືກຢຽບຢ່ຳ. ອີກຈັກຫນ້ອຍ ເວລາກ່ຽວກໍຈະມາເຖິງແລ້ວ.
[34]'ເນບູກາດເນັດຊາກະສັດແຫ່ງບາບີໂລນໄດ້ກິນຂ້ານ້ອຍເສຍແລ້ວ; ພະອົງໄດ້ບັງຂ້ານ້ອຍໃຫ້ສັບສົນ.
ແລະໄດ້ເຮັດໃຫ້ຂ້ານ້ອຍເປັນພາຊະນະວ່າງເປົ່າ; ເພາະພຣະອົງໄດ້ຊົງກືນຂ້ານ້ອຍເຫມືອນສັດຮ້າຍ;
ພະອົງຊົງເຮັດໃຫ້ທ້ອງຂອງພະອົງອີ່ມດ້ວຍອາຫານແຊບ; ພະອົງໄດ້ໄລ່ຂ້ານ້ອຍອອກໄປ.
[35]ເຢຣູຊາເລັມກ່າວວ່າ,'ຂໍໃຫ້ຄວາມຮັບຜິດຊອບສຳລັບເລືອດຕົກຂອງເຮົາຢູ່ແກ່ຊາວປະເທດບາບີໂລນ.'ນະຄອນເຢຣູສາເລັມຈະກ່າວວ່າ,
'ຂໍໃຫ້ໂລຫິດຂອງຂ້ານ້ອຍຕົກຢູ່ເຫນືອຊາວເຄນເດຍ.'
[36]ເພາະສະນັ້ນພຣະຢາເວກ່າວດັ່ງນີ້ວ່າ, "ເບິ່ງແມ, ເຮົາຈະແກ້ຄະດີຂອງພວກເຈົ້າ ແລະເຮັດການແກ້ແຄ້ນເພື່ອພວກເຈົ້າ.
ເພາະເຮົາຈະເຮັດໃຫ້ທະເລຂອງນາງແຫ້ງ ແລະເຮັດໃຫ້ແຫລ່ງນ້ຳຂອງນາງເຫືອດຫາຍ.[37]ແລະບາບີໂລນຈະກາຍເປັນສິ່ງຫັກພັງ,
ເປັນບ່ອນຫມາປ່າຢູ່, ເປັນຄວາມປະຫລາດໃຈ, ແລະເປັນທີ່ເຍາະເຍີ້ຍ, ປາດສະຈາກຜູ້ຄົນອາໄສ.
[38]ຊາວເມືອງບາບີໂລນຈະແຜດສຽງຮ້ອງໃສ່ກັນເຫມືອນໂຕສິງຫນຸ່ມ. ພວກເຂົາຈະແຜດສຽງຮ້ອງເຫມືອນລູກໂຕສິງ.
[39]ຂະນະທີ່ພວກເຂົາທັງຫລາຍເຜັດຮ້ອນ, ເຮົາຈະຕຽມງານລ້ຽງໃຫ້; ແລະເຮັດໃຫ້ພວກເຂົາມຶນເມົາ ເພື່ອພວກເຂົາຈະຍິນດີ,
ແລະຈົນນອນຫລັບຢູ່ເປັນນິດ ແລະ ບໍ່ຕື່ນເລີຍ—ນີ້ເປັນຄຳປະກາດຂອງພຣະຢາເວ—
[40]ເຮົາຈະນຳພວກເຂົາທັງຫລາຍລົງມາດັ່ງລູກແກະໄປຍັງການຂ້າ, ເຫມືອນແກະຜູ້ ລວມທັງພວກແບ້ຜູ້.
[41]ເມືອງບາບີໂລນຖືກຍຶດໄດ້ຢ່າງໃດນໍ! ເມືອງຊຶ່ງເປັນທີ່ສັນລະເສີນຂອງທົ່ວແຜ່ນດິນໂລກຖືກຍຶດແລ້ວ.
ບາບີໂລນໄດ້ກາຍເປັນສາກຫັກພັງທ່າມກາງບັນດາປະຊາຊາດໄດ້ຢ່າງໃດກັນ.[42]ທະເລຂຶ້ນມາເຫນືອບາບີໂລນ! ຄື້ນຢ່າງຫລວງຫລາຍຄຸມນາງໄວ້.
[43]ຫົວເມືອງຂອງນາງກາຍເປັນບ່ອນວ່າງເປົ່າ, ເປັນແຜ່ນດິນທີ່ແຫ້ງແລ້ງ, ແລະເປັນຖິ່ນແຫ້ງແລ້ງກັນດານ, ເປັນແຜ່ນດິນທີ່ບໍ່ມີຜູ້ໃດອາໄສຢູ່,
ແລະບໍ່ມີມະນຸດຄົນໃດຜ່ານຂ້າມໄປ.[44]ເພາະເຮົາຈະລົງໂທດພະເບນໃນບາບີໂລນ; ເຮົາຈະເອົາສິ່ງທີ່ມັນກືນເຂົ້າໄປອອກຈາກປາກຂອງເຂົາ,
ແລະບັນດາປະຊາຊາດຈະບໍ່ໄຫລໄປຫາມັນອີກ. ກຳແພງແຫ່ງບາບີໂລນຈະລົ້ມລົງມາ.
[45]ປະຊາຊົນຂອງເຮົາເອີຍ, ຈົ່ງອອກໄປເສຍຈາກທ່າມກາງນາງ. ໃຫ້ທຸກຄົນເອົາຊີວິດຂອງຕົນລອດພົ້ນຈາກຄວາມພິໂລດອັນຮ້ອນແຮງຂອງເຮົາ.
[46]ຢ່າໃຫ້ໃຈຂອງພວກເຈົ້າອ່ອນແອໄປ ແລະຢ່າໃຫ້ຢ້ານຕໍ່ຂ່າວຊຶ່ງໄດ້ຍິນໃນແຜ່ນດິນນັ້ນ, ແລະຈະມີຂ່າວມາໃນປີຫນຶ່ງ,
ຕໍ່ມາອີກປີຫນຶ່ງກໍຈະມີຂ່າວມາ, ແລະຄວາມທາລຸນກໍມີຢູ່ໃນແຜ່ນດິນນັ້ນ. ຜູ້ຄອບຄອງກໍຕໍ່ສູ້ກັບຜູ້ຄອບຄອງ.
[47]ເພາະສະນັ້ນ, ເບິ່ງແມ, ວັນເວລາຈະມາເຖິງ ເມື່ອເຮົາຈະລົງໂທດຮູບເຄົາລົບແຫ່ງບາບີໂລນ. ແຜ່ນດິນທັງຫມົດຂອງນາງຈະຕ້ອງໄດ້ອັບອາຍ
ແລະບັນດາຊາວເມືອງນັ້ນຊຶ່ງຖືກຂ້າຈະລົ້ມລົງຢູ່ໃນເມືອງນັ້ນ.[48]ແລ້ວຟ້າສະຫວັນ, ແຜ່ນດິນໂລກ ແລະສັບພະສິ່ງທີ່ມີຢູ່ໃນນັ້ນ
ຈະຮ້ອງເພງເຫນືອບາບີໂລນ. ເພາະວ່າຜູ້ທຳລາຍຈະມາຈາກທິດເຫນືອຕໍ່ສູ້ກັບນາງ—ພຣະຢາເວກ່າວດັ່ງນີ້ແຫລະ.
[49]"ບາບີໂລນໄດ້ເຮັດໃຫ້ຄົນອິດສະຣາເອນທີ່ຖືກຂ້າລົ້ມລົງສັນໃດ ຄົນທີ່ຖືກຂ້າແຫ່ງແຜ່ນດິນໂລກທັງປວງຈະຕ້ອງລົ້ມລົງທີ່ບາບີໂລນສັນນັ້ນ.
[50]ພວກເຈົ້າທັງຫລາຍຜູ້ທີ່ລອດພົ້ນໄປຈາກດາບ, ຈົ່ງໄປສາ! ຢ່າຢືນຢູ່ລ້າ. ຈົ່ງລະນຶກເຖິງພຣະຢາເວຈາກທີ່ໄກ;
ໃຫ້ນະຄອນເຢຣູຊາເລັມເຂົ້າມາໃນຈິດໃຈຂອງພວກເຈົ້າ.[51]ພວກເຮົາໄດ້ອັບອາຍ, ເພາະເຮົາໄດ້ຍິນຄຳເຍາະເຍີ້ຍ;
ຄວາມອັບປະຍົດໄດ້ປົກຄຸມຫນ້າເຮົາໄວ້, ເພາະຄົນຕ່າງຊາດໄດ້ເຂົ້າໃນສະຖານທີ່ບໍລິສຸດແຫ່ງພຣະນິເວດຂອງພຣະຢາເວ.
[52]ເພາະສະນັ້ນເບິ່ງແມ, ວັນເວລາຈະມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວ—ເມື່ອເຮົາຈະລົງໂທດຮູບເຄົາລົບຂອງນາງ,
ແລະຄົນທີ່ບາດເຈັບຈະຮ້ອງຄາງຢູ່ທົ່ວແຜ່ນດິນທັງຫມົດຂອງນາງ.[53]ເພາະເຖິງແມ່ນບາບີໂລນຈະຂຶ້ນໄປເທິງສະຫວັນ
ຫລືໄດ້ສ້າງປ້ອມປ້ອງກັນທີ່ສູງອັນເຂັ້ມແຂງຂອງນາງໄວ້, ບັນດາຜູ້ທຳລາຍກໍຈະຍັງມາຈາກເຮົາເຫນືອນາງ—ນີ້ເປັນຄຳປະກາດຂອງພຣະຢາເວ.
[54]ມີສຽງຮ້ອງແຫ່ງຄວາມທຸກທໍລະມານມາຈາກບາບີໂລນ, ສຽງການທຳລາຍຢ່າງໃຫຍ່ຫລວງຈາກແຜ່ນດິນຂອງຄົນເຄນເດຍ.
[55]ເພາະພຣະຢາເວໄດ້ຊົງເຮັດໃຫ້ບາບີໂລນເປັນທີ່ຖິ້ມຮ້າງ. ພຣະອົງກຳລັງຊົງເຮັດໃຫ້ສຽງທີ່ໃຫຍ່ໂຕຂອງນາງງຽບໄປ.
ເມື່ອສັດຕູຜູ້ທຳລາຍໄດ້ສົ່ງສຽງດັງຂອງຄະນອງເຫມືອນສຽງຄື້ນນ້ຳຫລວງຫລາຍ ສຽງດັງຂອງນ້ຳເຫລົ່ານັ້ນກໍດັງແຮງຫລາຍ.
[56]ເພາະບັນດານັກຮົບໄດ້ມາຕໍ່ສູ້ກັບເມືອງນັ້ນ—ຕໍ່ສູ້ກັບບາບີໂລນ! —ແລະພວກນັກຮົບຂອງເມືອງນັ້ນກໍຖືກຈັບໄປແລ້ວ.
ເພາະພຣະຢາເວຊົງເປັນພຣະເຈົ້າແຫ່ງການຕອບແທນ. ຄັນທະນູຂອງພວກເຂົາຖືກຫັກເປັນທ່ອນ, ພຣະອົງຈະຊົງແກ້ແຄ້ນ;
ພຣະອົງຈະຕອບສະຫນອງແນ່ນອນ.
[57]ເພາະເຮົາຈະເຮັດໃຫ້ພວກເຈົ້ານາຍຂອງນາງ, ແລະນັກປາດຂອງນາງ, ພວກເຈົ້າເມືອງຂອງນາງ, ຜູ້ບັງຄັບບັນຊາຂອງນາງ
ແລະນັກຮົບຂອງນາງມຶນເມົາ ພວກເຂົາຈະນອນຫລັບຢູ່ເປັນນິດ ບໍ່ຕື່ນອີກເລີຍ ນີ້ເປັນຄຳປະກາດຂອງພຣະມະຫາກະສັດ:
ຜູ້ຊົງພຣະນາມພຣະຢາເວຈອມໂຍທາ.[58]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ:
ກຳແພງອັນກວ້າງຂວາງຂອງບາບີໂລນຈະຖືກປາບລົງໃຫ້ລຽບສະເຫມີພື້ນດິນ ແລະປະຕູເມືອງສູງຂອງນາງຈະຖືກເຜົາດ້ວຍໄຟ.
ແລ້ວບັນດາປະຊາຊົນຈະເຮັດວຽກຢ່າງບໍ່ມີຜົນ ແລະຊົນຊາດທັງຫລາຍຈະອິດເມື່ອຍ ໂດຍບໍ່ມີປະໂຍດ
ທຸກສິ່ງທີ່ບັນດາປະຊາຊາດພະຍາຍາມຈະເຮັດເພື່ອເມືອງນັ້ນຈະຖືກເຜົາໄຟເສຍຈົນຫມົດສິ້ນ."
[59]ນີ້ເປັນຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທັມໄດ້ບັນຊາແກ່ເສຣາຢາລູກຊາຍເນຣີຢາ ຜູ້ເປັນລູກຊາຍມາເຊຢາ
ເມື່ອລາວໄປຍັງບາບີໂລນກັບເຊເດກີຢາກະສັດແຫ່ງຢູດາ. ໃນປີທີສີ່ແຫ່ງລາຊະການຂອງເພິ່ນນັ້ນ ເສຣາຢາເປັນຫົວຫນ້າຈັດທີ່ພັກ.
[60]ເພາະເຢເຣມີຢາໄດ້ຂຽນໃນຫນັງສືມ້ວນກ່ຽວກັບຄວາມຮ້າຍທັງຫມົດຊຶ່ງຈະມາເຖິງບາບີໂລ—
ຖ້ອຍຄຳເຫລົ່ານີ້ເປັນຄຳທີ່ຂຽນໄວ້ກ່ຽວກັບບາບີໂລນ.

[61]ເຢເຣມີຢາເວົ້າກັບເສຣາຢາວ່າ, “ເມື່ອທ່ານໄປເຖິງບາບີໂລນແລ້ວ, ທ່ານຈະເຫັນ
ແລະທ່ານຈະອ່ານຖ້ອຍຄຳເຫລົ່ານີ້ທັງຫມົດດ້ວຍສຽງດັງ.”[62]ແລະຈົ່ງກ່າວວ່າ, ‘ຂ້າແດ່ພຣະຢາເວ, ພຣະອົງໄດ້ກ່າວກັບສະຖານທີ່ນີ້ວ່າ,
ພຣະອົງເອງຈະຊົງທຳລາຍມັນເສຍ ແລະຈະບໍ່ມີຫຍັງອາໄສຢູ່ໃນນັ້ນ, ບໍ່ວ່າມະນຸດ ຫລືສັດໃດໆ, ແລະຈະເປັນທີ່ຮົກຮ້າງເປັນນິດ.’
[63]ຕໍ່ມາເມື່ອທ່ານອ່ານຫນັງສືນີ້ຈົບແລ້ວ, ຈົ່ງເອົາຫີນກ້ອນຫນຶ່ງມັດຕິດມັນໄວ້ ແລະໂຍນມັນຖິ້ມໄປໃນກາງແມ່ນ້ຳເອຟຣາດ.[64]ຈົ່ງກ່າວວ່າ,
‘ບາບີໂລນຈະຈົມລົງຢ່າງນີ້ແຫລະ ເມືອງນີ້ຈະບໍ່ຟູຂຶ້ນອີກເລີຍເນື່ອງດ້ວຍຄວາມຮ້າຍຊຶ່ງເຮົາຈະນຳມາຕໍ່ສູ້ເມືອງນັ້ນ
ແລະພວກເຂົາຈະອິດລົ້ມລົງ.’” ຖ້ອຍຄຳຂອງເຢເຣມີຢາມີພຽງເທົ່ານີ້.


generated on Tue Jun 17 19:01:42 2025

# 52

1ເຊເດກີຢາໄດ້ເປັນກະສັດເມື່ອອາຍຸຊາວເອັດພັນສາ; ຊຶ່ງປົກຄອງຢູ່ທີ່ນະຄອນເຢຣູຊາເລັມເປັນເວລາສິບເອັດພັນສາ. ພະມານດາຂອງພະອົງຊື່
ຮາມຸຕານ; ຊຶ່ງເປັນລູກສາວຂອງເຢເຣມີຢາຊາວເມືອງລິບນາ.
2ໃນສາຍພຣະເນດຂອງພຣະຢາເວນັ້ນຊຶ່ງເຫັນວ່າກະສັດເຊເດກີຢາໄດ້ຊຶ່ງເຮັດຊົ່ວຮ້າຍຫລາຍ; ເຊັ່ນດຽວກັນກັບກະສັດເຢໂຮຢາກີມໄດ້ເຮັດ.
3ສະນັ້ນ ຄວາມໂກດຮ້າຍຂອງພຣະຢາເວ, ເຫດການທັງຫມົດນີ້ຈຶ່ງເກີດຂຶ້ນໃນນະຄອນເຢຣູຊາເລັມ ແລະໃນຢູດາ,
ຈົນກະທັ້ງພຣະອົງໄດ້ຊຶ່ງຂັບໄລ່ພວກເຂົາໃຫ້ພົ້ນຈາກສາຍພຣະເນດຂອງພຣະອົງ. ແລ້ວເຊເດກີຢາໄດ້ກະບົດຕໍ່ສູ້ກະສັດບາບີໂລນ.

4ເຫດການທີ່ໄດ້ເກີດຂຶ້ນໃນວັນທີສິບເດືອນສິບຂອງປີທີເກົ້າ ແຫ່ງລາຊະການເຊເດກີຢາກະສັດຢູດາ, ເນບູກາດເນັດຊາ,
ກະສັດແຫ່ງບາບີໂລນໄດ້ຍົກທັບມາອ້ອມນະຄອນເຢຣູຊາເລັມ. ພວກເຂົາໄດ້ຕັ້ງຄ້າຍໄວ້ນອກເມືອງ, ແລະພວກເຂົາໄດ້ສ້າງກຳແພງອ້ອມເມືອງ.
5ດັ່ງນັ້ນ ນະຄອນເຢຣູຊາເລັມຈຶ່ງຖືກປິດລ້ອມຈົນເຖິງປີທີສິບເອັດແຫ່ງລາຊະການເຊເດກີຢາ.
6ໃນວັນທີເກົ້າເດືອນສີ່ປີດຽວກັນນັ້ນ, ໄດ້ເກີດການອຶດຢາກຂຶ້ນຢ່າງຮ້າຍແຮງຈົນປະຊາຊົນບໍ່ມີຫຍັງຈະກິນ.
7ແລ້ວພວກສັດຕູໄດ້ມ້າງເພກຳແພງເມືອງບ່ອນຫນຶ່ງອອກ, ແລະທະຫານທັງຫມົດທີ່ຢູ່ໃນເມືອງຈຶ່ງພາກັນຫນີ
ແລະອອກໄປຈາກນະຄອນນັ້ນໃນຕອນກາງຄືນ ໄປຕາມທາງປະຕູເມືອງລະຫວ່າງກຳແພງທັງສອງ,
ພວກເຂົາໄດ້ປົບຫນີອອກໄປທາງສວນອຸດທະຍານ, ເຖິງຈະມີຄົນເຄນເດຍໄດ້ລ້ອມຮອບຢູ່ໃນເມືອງນັ້ນ. ດັ່ງນັ້ນ
ພວກເຂົາຈຶ່ງໄດ້ອອກໄປໃນທາງທີ່ມຸ້ງຫນ້າໄປຍັງອາບາ. 8ແຕ່ກອງທັບຂອງຄົນເຄນເດຍໄດ້ໄລ່ຈັບເຊເດກີຢາໄດ້ທີ່ທົ່ງພຽງໃກ້ເມືອງເຢຣີໂກ.
ທະຫານທັງຫມົດຂອງພະອົງໄດ້ຫນີກະຈັດກະຈາຍໄປຈາກພະອົງ.
9ພວກເຂົາໄດ້ຈັບເຊເດກີຢາ ແລະ ໄດ້ນຳພະອົງມາມອບໃຫ້ກະສັດເນບູກາດເນັດຊາ ຢູ່ເມືອງຣິບລາໃນດິນແດນຮຳມາດ,
ບ່ອນທີ່ກະສັດອົງນັ້ນຊຶ່ງຕັດສິນລົງໂທດກະສັດເຊເດກີຢາ. 10ກະສັດບາບີໂລນໄດ້ຕັດສິນປະຫານຊີວິດພວກລູກຊາຍຂອງເຊເດກີຢາ
ຢູ່ທີ່ເມືອງຣິບລາຕໍ່ຫນ້າຕໍ່ຕາເຊເດກີຢາເອງ ແລະໄດ້ຕັດສິນປະຫານຊີວິດພວກເຈົ້ານາຍຂອງຢູດາດ້ວຍ. 11ຕໍ່ມາ
ພຣະອົງໄດ້ຄວັດຫນ່ວຍຕາຂອງເຊເດກີຢາອອກ ແລະໄດ້ຜູກໂສ້ນຳໄປຍັງບາບີໂລນ ແລ້ວຂັງໄວ້ໃນຄຸກຈົນຮອດມື້ຕາຍ.
12ຕໍ່ມາໃນວັນທີສິບເດືອນຫ້າ ຊຶ່ງເປັນປີທີສິບເກົ້າແຫ່ງລາຊະການເນບູກາດເນັດຊາ, ກະສັດບາບີໂລນ,
ເນບູຊາຣາດານໄດ້ມາຍັງນະຄອນເຢຣູຊາເລັມ. ເພິ່ນເປັນລາຊະເລຂາ ແລະ ເປັນຜູ້ບັນຊາການທະຫານຮັກສາພະອົງ
ແລະເປັນຂ້າຣາຊະການຂອງກະສັດແຫ່ງບາບີໂລນ. 13ເພິ່ນໄດ້ເຂົ້າໄປນະຄອນເຢຣູຊາເລັມ ແລ້ວໄດ້ເຜົາພຣະວິຫານ ເຜົາພະລາຊະວັງ
ແລະບ້ານເຮືອນຂອງບຸກຄົນສຳຄັນທຸກແຫ່ງໃນເມືອງນັ້ນນຳ. 14ສ່ວນກຳແພງເມືອງທີ່ອ້ອມເຢຣູຊາເລັມ,
ກອງທັບທັງຫມົດຂອງບາບີໂລນຜູ້ທີ່ໄດ້ຢູ່ກັບຜູ້ບັນຊາການກອງທະຫານຮັກສາພະອົງໄດ້ທຳລາຍກຳແພງເຫລົ່ານັ້ນ.
15ສ່ວນປະຊາຊົນທີ່ຍາກຈົນທີ່ສຸດ, ປະຊາຊົນທີ່ເຫລືອຢູ່ໃນເມືອງ ລວມທັງຄົນທີ່ຫນີເຂົ້າມາມອບຕົວຕໍ່ກະສັດບາບີໂລນ
ແລະກັບພວກນາຍຊ່າງທີ່ເຫລືອຢູ່ເນບູຊາຣາດານໄດ້ນຳບາງຄົນໄປເປັນຊະເລີຍ. 16ແຕ່ເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ
ໄດ້ປະຄົນທຸກຍາກທີ່ສຸດຂອງແຜ່ນດິນບາງຄົນໄວ້ ເພື່ອໃຫ້ພວກເຂົາເຮັດວຽກໃນສວນອະງຸ່ນ ແລະເຮັດໄຮ່ໄຖນາ.
17ສ່ວນບັນດາເສົາກັບຕີນເສົາ ແລະຂັນທອງສຳລິດໃນພຣະວິຫານຂອງພຣະຢາເວ ແລະແທ່ນທັງຫລາຍ ແລະອ່າງທອງແດງ
ທີ່ຢູ່ໃນພຣະວິຫານຂອງພຣະຢາເວ ຄົນເຄນເດຍໄດ້ຫັກເປັນທ່ອນ ແລ້ວຂົນເອົາທອງສຳລິດທັງຫມົດໄປຍັງບາບີໂລນ.
18ພວກເຂົາຍັງໄດ້ຂົນເອົາເຄື່ອງໃຊ້ເຫລົ່ານີ້ໄປ ຄືບັນດາຫມໍ້, ສຽມ, ຊວ້ານ, ຖາດແລະມີດຕັດໄສ້ຕະກຽງ ໂອໃສ່ເລືອດເວລາຂ້າສັດຖວາຍບູຊາ
ຫມໍ້ສຳລັບເຄື່ອງຫອມບູຊາ ແລະເຄື່ອງທອງສຳລິດທັງຫມົດທີ່ປະໂລຫິດໃຊ້ໃນພິທີການຂອງພຣະວິຫານ—
ຜູ້ບັນຊາການທະຫານຮັກສາພະອົງໄດ້ກວາດເອົາໄປ. 19ພວກເຂົາໄດ້ຂົນເອົາທຸກສິ່ງທີ່ເຮັດດ້ວຍຄຳ ຫລືເງິນໄປ ຄື ຫມໍ້ນ້ອຍ ອ່າງໃສ່ຖ່ານຫີນ
ໂອໃສ່ເລືອດ ຄຸໃສ່ຂີ້ເທົ່າໄຟ ຕີນຕະກຽງ ຖາດເຄື່ອງຫອມບູຊາ ຈອກເຄື່ອງດື່ມບູຊາ ເຄື່ອງທອງສຳລິດທີ່ກະສັດໂຊໂລໂມນເຮັດໄວ້ໃນພຣະວິຫານ
—ຜູ້ບັນຊາການທະຫານຮັກສາພະອົງໄດ້ກວາດເອົາໄປ.
20ເສົາສອງເສົາ ຕີນເສົາ ອ່າງໃຫຍ່ໃສ່ນ້ຳ ແລະ ຮູບງົວສິບສອງໂຕທີ່ຮອງຮັບອ່າງໃຫຍ່ນັ້ນ
ສິ່ງຕ່າງໆທີ່ຊາໂລໂມນໄດ້ຊຶ່ງສ້າງສຳລັບພຣະວິຫານຂອງພຣະຢາເວ ເຄື່ອງເຫລົ່ານີ້ ຫນັກຫລາຍຈົນຊັ່ງບໍ່ໄດ້. 21ເສົາສອງເສົານັ້ນ
ແຕ່ລະເສົາແທກໄດ້ດັ່ງນີ້: ລວງສູງສິບແປດສອກ ລວງອ້ອມສິບສອງສອກ ຂ້າງໃນເປັນໂກນ ຄວາມຫນາຂອງເສົາສີ່ນີ້ວ.
22ຢູ່ເທິງຫົວເສົາມີບົວທອງສຳລິດ ບົວແຕ່ລະດອກສູງຫ້າສອກ ມີຮູບພວງມາໄລແລະຮູບຫມາກພິລາລ້ອມຮອບບົວນັ້ນ
ສິ່ງທັງຫມົດນີ້ເຮັດດ້ວຍທອງສຳລິດ. 23ເທິງພວງມາໄລໂດຍຮອບມີຮູບຫມາກພິລາຮ້ອຍຫນ່ວຍ
ແຕ່ຫລຽວຂຶ້ນໄປຈາກເບື້ອງລຸ່ມເຫັນມີເກົ້າສິບຫົກຫນ່ວຍ.
24ຜູ້ບັນຊາການທະຫານ ຍັງໄດ້ຈັບເສຣາຢາມະຫາປະໂລຫິດ, ເຊຟານີຢາ ຜູ້ຮອງມະຫາປະໂລຫິດ, ແລະຄົນສຳຄັນອື່ນ
ອີກທີ່ຮັບໃຊ້ຢູ່ໃນວິຫານ ສາມຄົນໄປເປັນຊະເລີຍ. 25ເພິ່ນໄດ້ຈັບເອົາຜູ້ບັນຊາການທະຫານຄົນຫນຶ່ງ,
ທີ່ປຶກສາມະຫາກະສັດເຈັດຄົນທີ່ປຶກສາຜູ້ບັນຊາການທະຫານຊຶ່ງຮັບຫນ້າທີ່ເກນທະຫານ, ແລະຄົນສຳຄັນອື່ນ
ພ້ອມກັບພວກຄົນທີ່ສຳຄັນອີກຫົກສິບຄົນໄປຈາກເມືອງນັ້ນ.
26ແລ້ວເນບູຊາຣາດານຜູ້ບັນຊາການທະຫານຮັກສາພະອົງ ໄດ້ຈັບຄົນເຫລົ່ານີ້ນຳໄປ ແລະ ມອບໃຫ້ກະສັດບາບີໂລນທີ່ເມືອງຣິບລາ.
27ກະສັດບາບີໂລນໄດ້ຊຶ່ງລົງໂທດປະຫານພວກເຂົາຢູ່ເມືອງຣິບລາດິນແດນຮຳມາດ. ດັ່ງນັ້ນແຫລະ
ຢູດາຈຶ່ງໄດ້ໄປຈາກແຜ່ນດິນຂອງຕົນໄປເປັນຊະເລຍ.
28ຕໍ່ໄປນີ້ ແມ່ນຈຳນວນປະຊາຊົນທີ່ຖືກກະສັດເນບູກາດເນັດຊາກວາດຕ້ອນອອກຈາກປະເທດໄປເປັນຊະເລີຍ: ໃນລາຊະການປີທີເຈັດ, ຄົນຢູດາ
3,023 ຄົນ. 29ໃນປີທີສິບແປດເນບູກາດເນັດຊາກວາດຕ້ອນໄປຈາກນະຄອນເຢຣູຊາເລັມ832 ຄົນ. 30ໃນປີທີຊາວສາມ
ເນບູຊາຣາດານກວາດຕ້ອນໄປເປັນຊະເລີຍ, ຄົນຢູດາ745 ຄົນ. ລວມປະຊາຊົນທີ່ຖືກຈັບໄປເປັນຊະເລີມທັງຫມົດມີ 4.600 ຄົນ.


generated on Tue Jun 17 19:01:42 2025

[31]ເຫດການນີ້ໄດ້ເກີດຂຶ້ນຫລັງຈາກນັ້ນ ໃນປີທີສາມສິບເຈັດຂອງການເປັນຊະເລີຍ ພະອົງໄດ້ຊົງມີເມດຕາຕໍ່ເຢໂຮຢາກິນ, ກະສັດຢູດາ, ຄື ໄດ້ຊົງໂຜດເອົາພະອົງອອກຈາກຄຸກ
ຊຶ່ງໄດ້ຢູ່ໃນຄຸກເປັນເວລາສາມສິບຫົກປີສິບເອັດເດືອນກັບຊາວຫ້າມື້ເອວິນເມໂຣດັກເປັນກະສັດແຫ່ງບາບີໂລນ.
[32]ກະສັດເອວິນເມໂຣດັກໄດ້ຊົງເຮັດກັບກະສັດເຢໂຮຢາກິນດ້ວຍຄວາມເມດຕາຊົງໃຫ້ກຽດແກ່ພະອົງຫລາຍກວ່າໃຫ້ແກ່ກະສັດອົງອື່ນ
ທີ່ຖືກຈັບມານະຄອນບາບີໂລນ.[33]ດັ່ງນັ້ນ ເອວິນເມໂຣດັກຈຶ່ງໄດ້ຖ່າຍເຄື່ອງນຸ່ງນັກໂທດອອກຈາກກາຍ
ແລະໄດ້ຮັບປະທານອາຫານທີ່ໂຕະສະເຫວີຍຂອງກະສັດທຸກມື້ຕະຫລອດຊີວິດທີ່ຍັງເຫລືອຂອງທ່ານ,
[34]ແລະໄດ້ຊົງຮັບຂອງພະລາຊະທານຈາກກະສັດຕາມຄວາມຕ້ອງການຢູ່ສະເຫມີ ຈົນເຖິງວັນສິ້ນພະຊົນ.

# ເພງຄໍາຄວນ

1 [1]ຄັ້ງຫນຶ່ງໃນນະຄອນທີ່ເຕັມໄປດ້ວຍຜູ້ຄົນ ບັດນີ້ມານັ່ງດຽວດາຍແຕ່ຜູ້ດຽວ. ນາງໄດ້ເປັນກາຍເຫມືອນແມ່ຫມ້າຍແລ້ວ,
ນາງເຄີຍເປັນຍິງທີ່ມີກຽດສັກສີຂອງຊົນຊາດ. ນາງເປັນເຫມືອນດັ່ງເຈົ້າຍິງ ທ່າມກາງຊົນຊາດທັງຫລາຍ,
ແຕ່ບັດນີ້ຖືກບັງຄັບໃຫ້ເປັນທາດແລ້ວ.[2]ນາງຮ້ອງໄຫ້ ແລະ ຄໍາຄວນຍາມກາງຄືນ, ແລະນໍ້າຕາຂອງນາງໄຫລອາບແກ້ມ.
ບໍ່ມີໃຜທີ່ຮັກນາງປອບໃຈນາງ. ເພື່ອນທຸກຄົນຂອງນາງໄດ້ທໍລະຍົດຕໍ່ນາງ. ພວກເຂົາກາຍເປັນສັດຕຣູຂອງນາງ.

[3]ຫລັງຈາກຄວາມຍາກຈົນ ແລະ ຄວາມທໍລະມານແລ້ວ, ເມື່ອຢູດາໄດ້ໄປເປັນຊະເລີຍ. ນາງຕ້ອງອາໄສຢູ່ທ່າມກາງບັນດາປະຊາຊາດ ແລະ
ບໍ່ໄດ້ພົບທີ່ພັກສະຫງົບເລີຍ. ທຸກຄົນທີ່ໄລ່ລ່ານາງ ກໍຕາມນາງທັນໃນຄວາມແຄັ້ນໃຈຂອງນາງນັ້ນ.
[4]ຫົນທາງສູ່ຊີໂອນກໍໂສກເສົ້າ ເພາະບໍ່ມີຜູ້ໃດສັນຈອນໄປງານເທສະການງານລ້ຽງຕາມກໍານົດ. ປະຕູເມືອງທຸກບານຂອງນາງກໍຮ້າງ.
ປະໂລຫິດທັງຫລາຍຂອງນາງພາກັນຖອນໃຈ. ສາວປອດຂອງນາງຕ້ອງໂສກເສົ້າໃຈ ແລະ ນາງເອງກໍຂົມຂື່ນທີ່ສຸດ.
[5]ຜູ້ເປັນສັດຕຣູຂອງນາງກາຍເປັນເຈົ້ານາຍຂອງນາງ; ສັດຕຣູຂອງນາງໄດ້ຈະເຣີນຮຸ່ງເຮືອງ. ພຣະຢາເວຊົງໃຫ້ນາງທົນທຸກ
ເພາະບາບທັງຫລາຍຂອງນາງ. ລູກນ້ອຍທັງຫລາຍຂອງນາງເປັນຊະເລີຍຂອງສັດຕຣູ.
[6]ຄວາມງາມໄດ້ຫາຍໄປຈາກລູກສາວແຫ່ງຊີໂອນ. ພວກເຈົ້າຊາຍທັງຫລາຍຂອງນາງກໍເປັນ ດັ່ງຝູງກວາງທີ່ຫາຫຍ້າກິນບໍ່ເຫັນ,
ແລະພວກມັນກໍໄດ້ຫມົດແຮງຕໍ່ຫນ້າ ຜູ້ໄລ່ລ່າຂອງພວກມັນ.
[7]ໃນວັນທຸກຍາກ ແລະຍາມທີ່ບໍ່ມີເຮືອນອາໄສຢູ່ຂອງນາງ, ເຢຣູຊາເລັມຈະຣະນຶກເຖິງຂອງມີຄ່າທັງຫມົດທີ່ນາງເຄີຍມີໃນອາດີດ.
ເມື່ອປະຊາຊົນຂອງນາງຕົກຢູ່ໃນມືຂອງສັດຕຣູ, ບໍ່ມີໃຜຊ່ວຍນາງໄດ້ເລີຍ. ພວກສັດຕຣູທັງຫລາຍໄດ້ເຫັນນາງແລ້ວ ແລະ
ກໍເຍາະເຍີ້ຍຄວາມຫລົ້ມຈົມຂອງນາງ.
[8]ເຢຣູຊາເລັມໄດ້ເຮັດບາບໃຫຍ່ຫລວງ, ສະນັ້ນ, ນາງຈຶ່ງໄດ້ເປັນທີ່ເຍາະເຍີ້ຍເຫມືອນກັບສິ່ງທີ່ເປັນມົນທິນ. ທຸກຄົນທີ່ເຄີຍໃຫ້ກຽດຕິຍົດນາງ ບັດນີ້
ຫມິ່ນປະຫມາດນາງ ເພາະພວກເຂົາເຫັນຄວາມເປືອຍກາຍຂອງນາງ. ນາງໄດ້ແຕ່ຖອນໃຈ ແລະພະຍາຍາມຫັນຫນ້າຫນີໄປເສັຽ.
[9]ນາງໄດ້ເປັນມົນທິນພາຍໃຕ້ກະໂປ່ງຂອງນາງ. ນາງບໍ່ຄິດເຖິງອານາຄົດອີກແລ້ວ. ດັ່ງນັ້ນຄວາມຫລົ້ມຈົມຂອງນາງ ຈຶ່ງຫນ້າຢ້ານ.
ບໍ່ມີໃຜປອບໃຈນາງເລີຍ. ນາງໄດ້ແຕ່ຮ້ອງວ່າ, "ຂ້າແດ່ພຣະຢາເວ, ຂໍເບິ່ງຄວາມທຸກທໍຣະມານຂອງຂ້ານ້ອຍ,
ເພາະພວກສັດຕຣູນັ້ນຍິ່ງໃຫຍ່ເກີນໄປ."
[10]ສັດຕຣູໄດ້ເດ່ມືອອກມາຍຶດເອົາສິ່ງຂອງລ້ຳຄ່າທຸກຢ່າງຂອງນາງໄປ. ນາງໄດ້ເຫັນບັນດາປະຊາຊາດ
ບຸກເຂົ້າມາໃນສະຖານນະມັດສະການຂອງນາງ, ເຖິງແມ່ນວ່າຄົນທີ່ພຣະອົງຫ້າມວ່າ ພວກເຂົາຕ້ອງບໍ່ເຂົ້າມາໃນບ່ອນປະຊຸມຂອງພຣະອົງ.
[11]ປະຊາຊົນທັງຫມົດຂອງນາງໄດ້ຖອນໃຈໃຫຍ່ ເມື່ອພວກເຂົາສະແຫວງຊອກຫາອາຫານ. ພວກເຂົາໄດ້ເອົາເຄື່ອງຂອງມີຄ່າ
ແລກອາຫານເພື່ອຈະໄດ້ມີຊີວິດຢູ່. ເບິ່ງແມ, ພຣະຢາເວ, ຂໍພິຈາຣະນາຂ້ານ້ອຍ, ເພາະຂ້ານ້ອຍກາຍເປັນຄົນບໍ່ມີຄ່າໃດໆ.
[12]ທ່ານທັງຫລາຍທີ່ຍ່າງຜ່ານໄປ, ທ່ານບໍ່ເກີດຄວາມຮູ້ສຶກອັນໃດແນ່ບໍ? ເບິ່ງແມ,
ຈົ່ງເບິ່ງວ່າມີຄວາມທຸກອັນໃດແດ່ທີ່ຈະຄືກັບຄວາມທຸກທີ່ມາສູ່ຂ້ານ້ອຍ ເປັນຄວາມທຸກຊຶ່ງພຣະຢາເວໄດ້ເຮັດແກ່ຂ້ານ້ອຍ,
ໃນວັນທີ່ພຣະອົງໂກດຮ້າຍຂ້ານ້ອຍຢ່າງຮ້າຍແຮງນັ້ນ.
[13]ຈາກເບື້ອງເທິງ ພຣະອົງໄດ້ສົ່ງໄຟມາເຜົາໃຫ້ເຂົ້າໄປໃນ ກະດູກຂອງຂ້ານ້ອຍ, ແລະມັນກໍເລິກລົງໄປໃນກະດູກແທ້.
ພຣະອົງໄດ້ກາງຕາຫນ່າງໄວ້ດັກຕີນຂອງຂ້ານ້ອຍ ແລະ ໄດ້ຊົງເຮັດໃຫ້ຂ້ານ້ອຍຕ້ອງປີ້ນກັບ. ພຣະອົງໄດ້ເຮັດໃຫ້ຂ້ານ້ອຍຫມົດຫວັງ ແລະ
ອ່ອນແອຕະຫລອດເວລາ.[14]ແອກແຫ່ງບັນດາການລະເມີດຜິດຂອງຂ້ານ້ອຍຖືກມັດລວມກັນໂດຍມືຂອງພຣະອົງ.
ການລະເມີດເຫລົ່ານັ້ນກໍຖືກຫຍິບລວມກັນ ແລະ ໃສ່ອ້ອມຄໍຂອງຂ້ານ້ອຍ. ພຣະອົງເຮັດໃຫ້ ກໍາລັງຂອງຂ້ານ້ອຍອ່ອນລົງ.
ອົງພຣະຜູ້ເປັນເຈົ້າໄດ້ຊົງມອບຂ້ານ້ອຍໄວ້ໃນມືຂອງພວກມັນ, ແລະຜູ້ທີ່ຂ້ານ້ອຍບໍ່ສາມາດຕໍ່ຕ້ານໄດ້.
[15]ພຣະຜູ້ເປັນເຈົ້າໄດ້ໂຍນຂ້ານ້ອຍໃຫ້ອອກໄປ ຜູ້ກ້າຫານທັງຫລາຍທີ່ຕໍ່ສູ້ຂ້ານ້ອຍນັ້ນ. ພຣະອົງໄດ້ເອີ້ນຝູງຊົນມາສູ້ຂ້ານ້ອຍ
ເພື່ອບີບບີ້ຜູ້ຊາຍທີ່ແຂງແຮງຂອງຂ້ານ້ອຍໃຫ້ແຫລກໄປ. ອົງພຣະຜູ້ເປັນເຈົ້າໄດ້ຢຽບຢໍ້າສາວບໍຣິສຸດແຫ່ງຢູດາ
ເຫມືອນຢຽບຢໍ້າອະງຸ່ນໃນອ່າງຢຽບຫມາກອະງຸ່ນ.
[16]ດ້ວຍເຫດນີ້ເອງ ຂ້ານ້ອຍຈຶ່ງຮ້ອງໄຫ້. ດວງຕາຂອງຂ້ານ້ອຍ, ມີແຕ່ນໍ້າຕາທີ່ໄຫລອອກຈາກດວງຕາຂອງຂ້ານ້ອຍ
ເມື່ອຜູ້ປອບໃຈທີ່ຊ່ວຍຊີວິດຂອງຂ້ານ້ອຍນັ້ນ ຢູ່ຫ່າງໄກຈາກຂ້ານ້ອຍສາແລ້ວ. ບັນດາລູກຂອງຂ້ານ້ອຍຫມົດຫວັງ
ເພາະສັດຕຣູມີຊັຍຊະນະແລ້ວ.[17]ຊີໂອນເອີຍ ຈົ່ງກາງມືຂອງເຈົ້າອອກໃຫ້ກວ້າງ; ແຕ່ກໍບໍ່ມີໃຜທີ່ຈະປອບໃຈນາງເລີຍ.
ພຣະຢາເວສັ່ງຜູ້ທີ່ຢູ່ອ້ອມຮອບຢາໂຄບ ໃຫ້ກາຍເປັນສັດຕຣູຂອງລາວ. ເຢຣູຊາເລັມເປັນມົນທິນ ສໍາລັບພວກເຂົາທັງຫລາຍ.
[18]ພຣະຢາເວຊອບທັມແລ້ວ, ເພາະຂ້ານ້ອຍໄດ້ຂັດຂືນຕໍ່ພຣະບັນຍັດຂອງພຣະອົງ. ທຸກຊົນຊາດຈົ່ງຟັງເຖີດ, ແລະເບິ່ງການທົນທຸກຂອງຂ້ານ້ອຍ,
ສາວບໍຣິສຸດທັງຫລາຍ ແລະ ຜູ້ຊາຍທີ່ແຂງແຮງທັງຫລາຍຂອງຂ້ານ້ອຍໄດ້ຕົກເປັນຊະເລີຍແລ້ວ.

[19]ຂ້ານ້ອຍໄດ້ຮ້ອງຫາບັນດາສະຫາຍທັງຫລາຍຂອງຂ້ານ້ອຍ, ແຕ່ເຂົາທັງຫລາຍໄດ້ຫລອກລວງຂ້ານ້ອຍ. ພວກປະໂລຫິດ
ແລະພວກຜູ້ອາວຸໂສທັງຫລາຍຂອງຂ້ານ້ອຍ ກໍຕາຍຢູ່ທີ່ກາງເມືອງ, ຂະນະທີ່ຊອກຫາອາຫານພໍໃຫ້ຊີວິດຂອງພວກເຂົາ.
[20]ຂ້າແດ່ພຣະຢາເວ, ຂໍໂຜດເບິ່ງ, ເພາະຂ້ານ້ອຍມີຄວາມທຸກໃຈ; ທ້ອງຂອງຂ້ານ້ອຍກໍປັ່ນປ່ວນ, ໃຈຂອງຂ້ານ້ອຍກໍສັບສົນຢູ່ພາຍໃນ,
ເພາະຂ້ານ້ອຍໄດ້ທໍຣະຍົດຕໍ່ພຣະອົງ. ນອກເຮືອນ, ກໍເຮັດໃຫ້ເສັຽແມ່ຍ້ອນຄົມດາບ, ສ່ວນໃນເຮືອນກໍເຫລືອແຕ່ຄວາມຕາຍເທົ່ານັ້ນ.
[21]ເຂົາທັງຫລາຍໄດ້ຍິນສຽງວ່າ ຂ້ານ້ອຍຄໍ່າຄວນ, ແຕ່ບໍ່ໃຜປອບໃຈຂ້ານ້ອຍເລີຍ. ບັນດາສັດຕຣູທັງຫມົດຂອງຂ້ານ້ອຍ
ໄດ້ຍິນເຖິງເຫດຮ້າຍທີ່ຕົກແກ່ຂ້ານ້ອຍນັ້ນ ແລະພວກເຂົາພາກັນດີໃຈ ທີ່ພຣະອົງເຮັດແນວນີ້ນັ້ນ. ເພາະພຣະອົງໄດ້ຕາມພຣະສັນຍາໄວ້ນັ້ນ;
ບັດນີ້ ໃຫ້ພວກເຂົາເປັນເຫມືອນຂ້ານ້ອຍ.[22]ຂໍໃຫ້ຄວາມຊົ່ວທຸກຢ່າງຂອງພວກເຂົາ ປາກົດຢູ່ຕໍ່ຫນ້າພຣະອົງດ້ວຍ. ຂໍເຮັດໃຫ້ພວກເຂົາເຫມືອນ
ເຮັດກັບຂ້ານ້ອຍ ເພາະວ່າຄວາມຜິດທັງຫມົດຂອງຂ້ານ້ອຍເຖິດ ດ້ວຍການຄໍ່າຄວນຂອງຂ້ານ້ອຍນັ້ນ ຫລວງຫລາຍ
ແລະໃຈຂ້ານ້ອຍກໍອ່ອນແຮງ.


generated on Tue Jun 17 19:01:42 2025

2 [1]ພຣະຜູ້ເປັນເຈົ້າໄດ້ປົກຄຸມເຫນືອລູກສາວຂອງຊີໂອນ ພາຍໃຕ້ເມກແຫ່ງຄວາມໂກດຮ້າຍຂອງພຣະອົງ.
ພຣະອົງໄດ້ໂຍນຄວາມງົດງາມຂອງອິສະຣາເອນລົງຈາກຟ້າມາສູ່ດິນ. ພຣະອົງບໍ່ໄດ້ຣະນຶກເຖິງຮອງຕີນຂອງພຣະອົງ
ໃນວັນແຫ່ງຄວາມໂກດຮ້າຍຂອງພຣະອົງ.[2]ພຣະຜູ້ເປັນເຈົ້າກືນກິນ ແລະ ໄຮ້ຄວາມເມດຕາຕໍ່ເມືອງທຸກແຫ່ງຂອງຢາໂຄບ.
ໃນວັນແຫ່ງຄວາມໂກດຮ້າຍຂອງພຣະອົງ ພຣະອົງໄດ້ທຳລາຍກຳແພງຂອງເມືອງທັງຫລາຍ ລູກສາວຂອງຢູດານັ້ນ;
ພຣະອົງລ້າງຜານອານາຈັກລົງ ແລະເຫລົ່າຜູ້ປົກຄອງດິນລົງຢ່າງອັບປີທີ່ສຸດ.

[3]ດ້ວຍຄວາມໂກດຮ້າຍຢ່າງຮຸນແຮງ ພຣະອົງຕັດພູທຸກຫນ່ວຍຂອງອິສະຣາເອນອອກ. ພຣະອົງຖອນການປົກປ້ອງຮັກສາຈາກສັດຕຣູ.
ພຣະອົງໄດ້ເຜົາຢາໂຄບ ເຫມືອນແປວໄຟລຸກລາມ ຊຶ່ງເຜົາທຸກສິ່ງທີ່ຢູ່ຮອບໆມັນ.[4]ເຫມືອນເປັນສັດຕຣູ ພຣະອົງໄດ້ກົ່ງຄັນທະນູແນໃສ່ພວກເຮົາ,
ດ້ວຍມືຂວາຂອງພຣະອົງ ພ້ອມທີ່ຈະຍິງອອກໄປ. ພຣະອົງໄດ້ຊົງປຣະຫານທຸກຄົນ ຜູ້ເປັນທີ່ຊື່ນຕາຊື່ນໃຈພຣະອົງ
ໃນເຕັນຂອງລູກສາວຂອງຊີໂອນ; ພຣະອົງໄດ້ເທຄວາມໂກດຮ້າຍຂອງພຣະອົງ ເຫມືອນໄຟແຜດເຜົາ.
[5]ອົງພຣະຜູ້ເປັນເຈົ້າກາຍເປັນເຫມືອນສັດຕຣູ. ພຣະອົງໄດ້ຊົງກືນກິນອິສະຣາເອນເສັຽແລ້ວ. ພຣະອົງໄດ້ກືນກິນຣາຊະວັງທັງຫມົດຂອງນາງ.
ພຣະອົງໄດ້ທຳລາຍຖານທີ່ຫມັ້ນເຂັ້ມແຂງຕ່າງໆ. ພຣະອົງໄດ້ເພີ່ມການຮ້ອງໄຫ້ ແລະການຄ່ຳຄວນສຳລັບລູກສາວຂອງຢູດາ.
[6]ພຣະອົງໄດ້ໂຈມຕີຫໍເຕັນຂອງພຣະອົງ ເຫມືອນຕູບຢູ່ໃນສວນ. ພຣະອົງໄດ້ທຳລາຍບ່ອນປະຊຸມສັກສິດ.
ພຣະຢາເວໄດ້ເຮັດໃຫ້ທັງບ່ອນປະຊຸມສັກສິດ ແລະວັນສະບາໂຕທັງຫລາຍໃນຊີໂອນໄດ້ຖືກລືມ, ເພາະພຣະອົງໄດ້ເຮັດໃຫ້ທັງກະສັດ ແລະ
ປະໂລຫິດຖືກຫມິ່ນປະຫມາດດ້ວຍຄວາມໂກດຮ້າຍອັນຮຸນແຮງຂອງພຣະອົງ.
[7]ອົງພຣະຜູ້ເປັນເຈົ້າໄດ້ຊົງປະຕິເສດແທ່ນບູຊາຂອງພຣະອົງ ແລະ ໄດ້ຖິ້ມສະຖານນະມັດສະການຂອງພຣະອົງ.
ພຣະອົງໄດ້ມອບກຳແພງຂອງຣາຊະວັງຂອງນາງໄວ້ໃນມືຂອງສັດຕຣູ. ພວກເຂົາໄດ້ສົ່ງສຽງຮ້ອງໃນພຣະວິຫານຂອງພຣະຢາເວ,
ຄືກັບວັນສະຫລອງເທສະການທີ່ໄດ້ກຳນົດໄວ້.
[8]ພຣະຢາເວໄດ້ຕັ້ງໃຈທີ່ຈະທຳລາຍກຳແພງເມືອງຂອງລູກສາວຂອງຊີໂອນ. ພຣະອົງໄດ້ກາງສາຍວັດແທກອອກ ແລະ
ບໍ່ໄດ້ຢຸດທີ່ຈະທຳລາຍກຳແພງ. ພຣະອົງໄດ້ເຮັດໃຫ້ທັງກຳແພງດິນ ແລະກຳແພງຄ່ຳຄວນ; ພວກເຂົາທັງສອງກວດທຳລາຍໄປເສັຽ.
[9]ປະຕູທັງຫລາຍຂອງນາງໄດ້ຍຸບລົງເຖິງດິນ; ພຣະອົງໄດ້ທຳລາຍ ແລະ ຫັກກົ່ງປະຕູທັງຫລາຍຂອງນາງ. ກະສັດຂອງນາງ
ແລະບັນດາເຈົ້າເມືອງຂອງນາງຕົກເປັນຊະເລີຍທ່າມກາງຊາດຕ່າງໆ, ກົດບັນຍັດນັ້ນກໍບໍ່ມີອີກຕໍ່ໄປແລ້ວ
ແລະຜູ້ທຳນວາຍທັງຫລາຍກໍບໍ່ໄດ້ຮັບນິມິດຈາກພຣະຢາເວອີກຕໍ່ໄປ.
[10]ບັນດາຜູ້ອາວຸໂສຂອງລູກສາວຂອງຊີໂອນ ນັ່ງຢູ່ທີ່ຫນ້າດິນໃນຄວາມງຽບ. ພວກເຂົາໄດ້ໂຮຍຂີ້ເຖົ່າເທິງຫົວຂອງພວກເຂົາ ແລະ
ນຸ່ງຫົ່ມເຄື່ອງທີ່ເຮັດດ້ວຍຜ້າປ່ານ. ບັນດາສາວບໍຣິສຸດແຫ່ງນະຄອນເຢຣູຊາເລັມໄດ້ກົ້ມຫົວຂອງພວກເຂົາລົງເຖິງດິນ.
[11]ດວງຕາຂອງຂ້ານ້ອຍໄດ້ຫມອງຊ້ຳ ເພາະການຮ້ອງໄຫ້; ທ້ອງຂອງຂ້ານ້ອຍກໍເປັນທຸກ; ສ່ວນພາຍໃນຂອງຂ້ານ້ອຍກໍໄຫລອອກມາສູ່ດິນ
ເພາະການທຳລາຍຂອງລູກສາວແຫ່ງປະຊາຊົນຂອງຂ້ານ້ອຍ, ເດັກນ້ອຍ ແລະເດັກແດງຢູ່ຕາມແຄມທາງຂອງເມືອງ.
[12]ພວກເຂົາເວົ້າກັບແມ່ຂອງພວກເຂົາວ່າ, "ອາຫານແລະ ເຫລົ້າອະງຸ່ນຢູ່ໃສ?" ຂະນະທີ່ພວກເຂົາເປັນລົມ
ຄືຄົນບາດເຈັບກາງທາງຕ່າງໆຂອງເມືອງ, ຊີວິດຂອງພວກເຂົາກໍອອກໄປຈາກອ້ອມເອິກແມ່ຂອງພວກເຂົາ.
[13]ລູກສາວຂອງເຢຣູຊາເລັມເອີຍ, ຂ້ານ້ອຍຈະເວົ້າອັນໃດເພື່ອເຈົ້າໄດ້ລະ? ສາວບໍຣິສຸດຂອງຊີໂອນເອີຍ, ຂ້ານ້ອຍຈະທຽບເຈົ້າກັບສິ່ງໃດດີ,
ເພື່ອຈະປອບໃຈເຈົ້າໄດ້? ບາດແຜຂອງເຈົ້າເລິກຄືດັ່ງທະເລ. ໃຜສາມາດປິ່ນປົວເຈົ້າໃຫ້ຫາຍດີໄດ້?[14]ນິມິດຂອງບັນດາຜູ້ທຳນວາຍລ້ວນຈອມປອມ
ແລະ ໄຮ້ຄ່າຕໍ່ເຈົ້າ. ພວກເຂົາບໍ່ໄດ້ເປີດເຜີຍຄວາມຊົ່ວຂອງເຈົ້າ ເພື່ອຈະນຳອະນາຄົດກັບມາ, ແຕ່ພວກເຂົາໄດ້ແຈ້ງຂ່າວເຈົ້ານັ້ນຈອມປອມ ແລະ
ພາໃຫ້ຫລົງຜິດໄປ.
[15]ຄົນທັງຫລາຍທີ່ຍ່າງຜ່ານໄປມາຕາມທາງ ໄດ້ຕົບມືຂອງພວກເຂົາຫມິ່ນປະຫມາດເຈົ້າ. ພວກເຂົາຖາກຖາງ ແລະ
ແກ່ວງຫົວສົ່ນນ້ຳຫນ້າລູກສາວຂອງເຢຣູຊາເລັມ ແລະ ກ່າວວ່າ,"ນີ້ບໍ່ຄືນະຄອນທີ່ໄດ້ຮັບການຂະຫນານນາມວ່າ
'ຄວາມງາມພຽບພ້ອມ'?"[16]ສັດຕຣູທັງຫມົດຂອງເຈົ້າອ້າປາກ ແລະ ສົ່ງສຽງເຍາະເຍີ້ຍ. ພວກເຂົາໄດ້ຍິງແຂ້ວ ແລະ ຂົບແຂ້ວ ແລະ
ກ່າວວ່າ,"ພວກເຮົາໄດ້ກືນເຈົ້າລົງໄດ້ແລ້ວ! ນີ້ເປັນວັນທີ່ເຮົາລໍຖ້າ! ພວກເຮົາຢູ່ຈົນໄດ້ເຫັນສິ່ງນີ້ເກີດຂຶ້ນ!"
[17]ພຣະຢາເວໄດ້ເຮັດຕາມທີ່ພຣະອົງໄດ້ວາງແຜນໄວ້ວ່າ ຈະຊົງເຮັດ. ພຣະອົງໄດ້ເຮັດໃຫ້ສຳເລັດຕາມພຣະຄັມຂອງພຣະອົງ.
ພຣະອົງໄດ້ໂຄ່ນລົ້ມເຈົ້າລົງໂດຍບໍ່ມີຄວາມປານີ, ເພາະພຣະອົງຍອມໃຫ້ສັດຕຣູມີຄວາມຍິນດີເຫນືອເຈົ້າ; ພຣະອົງໄດ້ເຂົ້າຂອງສັດຕຣູຂອງເຈົ້າ.
[18]ຫົວໃຈຂອງພວກເຂົາຮ້ອງຫາພຣະຜູ້ເປັນເຈົ້າ, ກຳແພງຂອງລູກສາວຂອງຊີໂອນເອີຍ! ໃຫ້ນ້ຳຕາຂອງເຈົ້າໄຫລມາ ຄືແມ່ນ້ຳທັງກາງເວັນ
ແລະກາງຄືນ. ຢ່າໄດ້ຢຸດຢ່ອນ, ຢ່າໃຫ້ຕາຂອງເຈົ້າໄດ້ພັກເລີຍ.[19]ຈົ່ງຮ້ອງອອກມາ, ຮ້ອງໄຫ້ໃນເວລາກາງຄືນ, ຕັ້ງແຕ່ເລີ່ມມືດນັ້ນ!
ຈົ່ງເທຄວາມໃນໃຈຂອງເຈົ້າອອກມາ ເຫມືອນດັ່ງສາຍນ້ຳຕໍ່ຫນ້າຂອງພຣະຜູ້ເປັນເຈົ້າ. ຈົ່ງຍົກມືຂຶ້ນອ້ອນວອນຕໍ່ພຣະອົງ
ເພື່ອຂໍຊີວິດລູກທັງຫລາຍຂອງເຈົ້າ ຊຶ່ງເປັນລົມໄປ ເພາະຄວາມຫິວຢູ່ທຸກແຈຂອງຫົນທາງ."
[20]ຂໍຊົງເບິ່ງດ້ວຍ, ພຣະຢາເວ, ແລະພິຈາຣະນາຄົນເຫລົ່ານັ້ນແດ່ພຣະອົງຈັດການ. ຄວນຫລືທີ່ຜູ້ຍິງຈະກິນຫມາກໄມ້ຈາກການຖືພາຂອງນາງ,
ຄືບັນດາລູກໆທີ່ນາງເຝົ້າລ້ຽງດູມາຫລື? ຄວນທີ່ປະໂລຫິດ ແລະ ຜູ້ທຳນວາຍຖືກຂ້າໃນສະຖານນະມັດສະການຂອງພຣະຜູ້ເປັນເຈົ້າຫລື?
[21]ທັງຄົນຫນຸ່ມ ແລະ ຄົນເຖົ້າທັງຫລາຍ ນອນເກືອກຝຸ່ນນຳກັນຕາມຫົນທາງ. ຍິງສາວ ແລະຊາຍຫນຸ່ມຂອງຂ້ານ້ອຍ ໄດ້ລົ້ມລົງດ້ວຍຄົມດາບ.
ພຣະອົງຂ້າພວກເຂົາໂດຍບໍ່ປານີເລີຍ.[22]ພຣະອົງໄດ້ລະດົມ ຄວາມຫນ້າຢ້ານກົວສັ່ນໄຫວຮອບດ້ານເຂົ້າໃສ່ຂ້ານ້ອຍ
ເຫມືອນເກນເອົາຄົນມາໃນມື້ງານລ້ຽງຕາມເທສະການ, ໃນວັນແຫ່ງຄວາມໂກດຮ້າຍຂອງພຣະຢາເວ ບໍ່ມີໃຜຫນີໄດ້ ຫລື ລອດຊີວິດໄປໄດ້;
ສັດຕຣູຂອງຂ້ານ້ອຍໄດ້ທຳລາຍບັນດາຜູ້ທີ່ຂ້ານ້ອຍເບິ່ງແຍງ ແລະ ລ້ຽງດູ.

 generated on Tue Jun 17 19:01:42 2025

3 [1]ຂ້ານ້ອຍຄືຜູ້ເຫັນຄວາມທຸກລຳບາກ ຈາກໄມ້ແສ້ຂອງຄວາມໂກດຮ້າຍຂອງພຣະຢາເວ.[2]ພຣະອົງໄດ້ຊົງຂັບໄລ່ຂ້ານ້ອຍ ແລະ
ເຮັດໃຫ້ຂ້ານ້ອຍຍ່າງໄປໃນຄວາມມືດ ແທນທີ່ຈະຍ່າງໄປໃນຄວາມສະຫວ່າງ.[3]ອັນທີ່ຈິງ ພຣະອົງຊົງຫັນມືຂອງພຣະອົງມາຕໍ່ສູ້ຂ້ານ້ອຍ
ຊ້ຳແລ້ວຊ້ຳອີກ, ຈົນຫມົດມື້.[4]ພຣະອົງໄດ້ເຮັດໃຫ້ຊີ້ນ ແລະ ຫນັງຂອງຂ້ານ້ອຍຫ່ຽວຍານໄປ; ພຣະອົງໄດ້ຫັກກະດູກຂອງຂ້ານ້ອຍ.

[5]ພຣະອົງໄດ້ສ້າງເຄື່ອງດັກຈັບຂ້ານ້ອຍ, ແລະລ້ອມຂ້ານ້ອຍໄວ້ດ້ວຍຄວາມຂົມຂື່ນ ແລະ ຄວາມທຸກລຳບາກ.
[6]ພຣະອົງໄດ້ເຮັດໃຫ້ຂ້ານ້ອຍຢູ່ໃນສະຖານທີ່ມືດ, ເຫມືອນຄົນທີ່ຕາຍໄປດົນແລ້ວ.[7]ພຣະອົງໄດ້ລ້ອມຂ້ານ້ອຍໄວ້ ແລະ ຂ້ານ້ອຍບໍ່ສາມາດຫນີໄດ້.
ພຣະອົງໄດ້ຖ່ວງຂ້ານ້ອຍດ້ວຍໂສ້ອັນຫນັກ.[8]ແລະເຖິງແມ່ນວ່າ ຂ້ານ້ອຍຮ້ອງອ້ອນວອນ ແລະ ຂໍຄວາມຊ່ວຍເຫລືອ,
ພຣະອົງກໍລະເລີຍຕໍ່ຄຳອະທິຖານຂອງຂ້ານ້ອຍ.
[9]ພຣະອົງໄດ້ຕັນທາງຂອງຂ້ານ້ອຍດ້ວຍກຳແພງຫີນສະກັດ; ພຣະອົງໄດ້ເຮັດໃຫ້ຫົນທາງທັງຫລາຍຂອງຂ້ານ້ອຍຄົດລ້ຽວ.
[10]ພຣະອົງເປັນເຫມືອນຫມີທີ່ຄອຍໂດດຄຸບຂ້ານ້ອຍ, ເຫມືອນໂຕສິງທີ່ດັກຊຸ້ມຢູ່;[11]ພຣະອົງໄດ້ລາກຂ້ານ້ອຍອອກຈາກທາງ,
ພຣະອົງໄດ້ເຮັດໃຫ້ຂ້ານ້ອຍເສົ້າໃຈ.
[12]ພຣະອົງໄດ້ກົ່ງຄັນທະນູ ແລະ ໄດ້ແນໃສ່ຂ້ານ້ອຍດ້ວຍລູກທະນູຂອງພຣະອົງ.[13]ພຣະອົງໄດ້ຍິງເຂົ້າຫມາກໄຂ່ຫລັງຂອງຂ້ານ້ອຍ
ດ້ວຍລູກທະນູຈາກບັ້ງທະນູຂອງພຣະອົງ.[14]ຂ້ານ້ອຍຕົກເປັນຂີ້ປາກຂອງປະຊາຊົນທັງຫມົດ ຊຶ່ງຫົວຂວັນໃສ່ຂ້ານ້ອຍ,
ເປັນສິ່ງທີ່ເຮັດໃຫ້ພວກເຂົາເຍາະເຍີ້ຍຂ້ານ້ອຍທັງກາງເວັນກາງຄືນ.[15]ພຣະອົງໄດ້ໃຫ້ຂ້ານ້ອຍເຕັມໄປດ້ວຍຄວາມຂົມຂື່ນ
ແລະໄດ້ບັງຄັບຂ້ານ້ອຍໃຫ້ດື່ມນ້ຳບໍລະເພັດ.
[16]ພຣະອົງໄດ້ຫລົກແຂ້ວຂ້ານ້ອຍດ້ວຍເສດແກ້ວ; ພຣະອົງໄດ້ຢຽບຢ່ຳຂ້ານ້ອຍໃຫ້ຈົມເຖິງຂີ້ຝຸ່ນດິນ.[17]ຈິດໃຈຂອງຂ້ານ້ອຍກໍບໍ່ມີສັນຕິສຸກ:
ຂ້ານ້ອຍລືມສິ່ງທີ່ເປັນຄວາມສຸກໄປແລ້ວ.[18]ດັ່ງນັ້ນຂ້ານ້ອຍຈຶ່ງກ່າວວ່າ, "ຄວາມອົດທົນຂອງຂ້ານ້ອຍຈົບຫາຍໄປ ແລະ
ຄວາມຫວັງຂອງຂ້ານ້ອຍໃນພຣະຢາເວໄດ້ສູນຫາຍແລ້ວ."
[19]ໂຜດຣະນຶກເຖິງຄວາມລຳບາກຂອງຂ້ານ້ອຍ ແລະການພະເນຈອນຂອງຂ້ານ້ອຍ, ນ້ຳບໍລະເພັດ ແລະຄວາມຂົມຂື່ນ.
[20]ຂ້ານ້ອຍຈື່ຈຳສິ່ງເຫລົ່ານີ້ໄດ້ດີ ແລະຂ້ານ້ອຍກໍທໍ້ຖອຍໃຈຢູ່ພາຍໃນຂ້ານ້ອຍສະເຫມີ.[21]ແຕ່ຂ້ານ້ອຍກຳຫວນຄິດເຖິງ
ແລະຂ້ານ້ອຍກໍໄດ້ມີຄວາມຫວັງ.
[22]ຄວາມຮັກອັນຫມັ້ນຄົງຂອງພຣະຢາເວ ບໍ່ເຄີຍສິ້ນສຸດ ແລະຄວາມເມດຕາຂອງພຣະອົງບໍ່ເຄີຍຫມົດສິ້ນ,
[23]ຄວາມສັດຊື່ຂອງພຣະອົງຍິ່ງໃຫຍ່ຫລາຍ; ມັນໃຫມ່ທຸກໆເຊົ້າ.[24]"ພຣະຢາເວຊົງເປັນມໍຣະດົກຂອງຂ້ານ້ອຍ," ຂ້ານ້ອຍກ່າວວ່າ, ເຫດສະນັ້ນ
ຂ້ານ້ອຍຈະຫວັງໃນພຣະອົງ.
[25]ພຣະຢາເວດີຕໍ່ຜູ້ທີ່ລໍຖ້າພຣະອົງ, ຕໍ່ຄົນທີ່ສະແຫວງຫາພຣະອົງ.[26]ເປັນການດີທີ່ຈະລໍຖ້າຄວາມພົ້ນພຣະຢາເວຢ່າງງຽບໆ.
[27]ເປັນການດີທີ່ຈະແບກແອກໄວ້ ຂະນະທີ່ລາວຍັງຫນຸ່ມຢູ່.[28]ໃຫ້ລາວນັ່ງງຽບໆ ຢູ່ຕາມລຳພັງ ເມື່ອພຣະອົງວາງແອກນັ້ນໄວ້ເທິງເຂົາ.
[29]ໃຫ້ລາວເອົາປາກລົງໄປຈຸຂີ້ຝຸ່ນດິນກໍຍັງຈະມີຄວາມຫວັງ.
[30]ໃຫ້ລາວອ່ຽງແກ້ມໃຫ້ຜູ້ທີ່ຈະຕົບລາວ, ແລະໃຫ້ລາວຍອມຮັບຄວາມອັບປະຍົດ.[31]ເພາະພຣະຜູ້ເປັນເຈົ້າຈະບໍ່ໄດ້ລະຖິ້ມພວກເຮົາຕະຫລອດໄປ,
[32]ແຕ່ເຖິງວ່າພຣະອົງໃຫ້ເກີດຄວາມໂສກເສົ້າ, ພຣະອົງກໍຈະສະແດງຄວາມເມດຕາຕາມ ຄວາມຮັກຫມັ້ນຄົງຂອງພຣະອົງຢ່າງບໍຣິບູນ.
[33]ເພາະພຣະອົງບໍ່ໄດ້ຊົງເຕັມໃຈທີ່ຈະໃຫ້ເກີດຄວາມທຸກທໍຣະມານ ຫລືຄວາມໂສກເສົ້າແກ່ລູກຫລານຂອງມະນຸດຊາດ.
[34]ການຢຽບຢ່ຳນັກໂທດແຫ່ງແຜ່ນດິນໂລກທັງຫມົດໃຫ້ຢູ່ໃຕ້ຕີນ,[35]ການບໍ່ໃຫ້ຄວາມຍຸຕິທັມ ແກ່ຜູ້ຫນຶ່ງຜູ້ໃດຕໍ່ພຣະພັກຂອງອົງຜູ້ສູງສຸດ,
[36]ທີ່ໄດ້ປະຕິເສດຄວາມຍຸຕິທັມແຕ່ຄົນເຊັ່ນນັ້ນ—ພຣະຜູ້ເປັນເຈົ້າຈະບໍ່ເຫັນດີນຳໃນສິ່ງເຫລົ່ານີ້.
[37]ໃຜທີ່ໄດ້ເວົ້າ ແລະ ມັນເປັນໄປໄດ້, ນອກຈາກພຣະຜູ້ເປັນເຈົ້າຈະສັ່ງໃຫ້ມັນເກີດຂຶ້ນຕາມນັ້ນ?[38]ນອກຈາກລົມປາກຂອງອົງຜູ້ສູງສຸດ ທັງພັຍພິບັດ
ແລະ ສິ່ງດີງາມລ້ວນເກີດຂຶ້ນບໍ່ແມ່ນບໍ?[39]ມະນຸດຈະຈົ່ມໄດ້ຢ່າງໃດ? ຄົນຫນຶ່ງຈະຈົ່ມເມື່ອຖືກລົງໂທດ ເພາະບາບທັງຫລາຍຂອງຕົນໄດ້ແນວໃດ?
[40]ໃຫ້ພວກເຮົາສຳຫລວດເບິ່ງທາງທັງຫລາຍຂອງພວກເຮົາ ແລະທົດສອບສິ່ງເຫລົ່ານີ້, ແລະໃຫ້ພວກເຮົາກັບມາຫາພຣະຢາເວ.
[41]ໃຫ້ພວກເຮົາຊູໃຈ ແລະ ຍົກມືຂຶ້ນຕໍ່ພຣະເຈົ້າໃນທ້ອງຟ້າ:[42]"ຂ້ານ້ອຍທັງຫລາຍໄດ້ເຮັດບາບ ແລະ ໄດ້ກະບົດ, ແລະ ພຣະອົງບໍ່ໄດ້ໃຫ້ອະພັຍ.
[43]ພຣະອົງໄດ້ຊົງປົກຄຸມພຣະອົງເອງໄວ້ ດ້ວຍຄວາມໂກດຮ້າຍຂອງພຣະອົງ, ແລະຊົງໄລ່ຕາມລ່າພວກຂ້ານ້ອຍທັງຫລາຍ,
ພຣະອົງປຣະຫານຂ້ານ້ອຍ ແລະ ພຣະອົງບໍ່ໄດ້ຍົກເວັ້ນໃຜເລີຍ.
[44]ພຣະອົງໄດ້ປົກຄຸມພຣະອົງເອງໄວ້ດ້ວຍເມກ ເພື່ອບໍ່ໃຫ້ຄຳອະທິຖານສາມາດຜ່ານຂຶ້ນໄປໄດ້.[45]ພຣະອົງໄດ້ເຮັດໃຫ້ຂ້ານ້ອຍທັງຫລາຍສົກກະປົກ
ແລະຖືກປະຕິເສດໃນຫມູ່ປະຊາຊາດ,[46]ສັດຕຣູທັງຫລາຍສາບແຊ່ງນ້ອຍທັງຫລາຍ.[47]ຄວາມຢ້ານແລະຂຸມດັກຈັບໄດ້ມາຍັງຂ້ານ້ອຍທັງຫລາຍ,
ຄວາມວິບັດແລະການທຳລາຍກໍຕາມມາ.
[48]ດວງຕາຂອງຂ້ານ້ອຍມີແຕ່ນ້ຳຕາໄຫລ ເຫມືອນດັ່ງແມ່ນ້ຳເພາະປະຊາຊົນຂອງຂ້ານ້ອຍຖືກທຳລາຍ.
[49]ດວງຕາຂອງຂ້ານ້ອຍຈະຫລັ່ງນ້ຳຕາບໍ່ຢຸດເຊົາ; ບໍ່ໄດ້ບັນເທົາເລີຍ.[50]ຈົນກວ່າພຣະອົງຈະເບິ່ງລົງມາ ແລະ ພຣະຢາເວຈະເຫັນຈາກສະຫວັນ.
[51]ດວງຕາຂອງຂ້ານ້ອຍເຮັດໃຫ້ຂ້ານ້ອຍເປັນທຸກ ເພາະບັນດາລູກສາວແຫ່ງເມືອງຂອງຂ້ານ້ອຍ.[52]ຂ້ານ້ອຍຖືກຕາມລ່າເຫມືອນກັບນົກ
ຈາກຜູ້ເປັນສັດຕຣູທັງຫລາຍຂອງຂ້ານ້ອຍ; ພວກເຂົາໄດ້ໄລ່ລ່າຂ້ານ້ອຍໂດຍບໍ່ມີເຫດຜົນ.[53]ພວກເຂົາໄດ້ໂຍນຂ້ານ້ອຍລົງໃນຂຸມເລິກ
ແລະພວກເຂົາໄດ້ແກ່ວງກ້ອນຫີນໃສ່ຂ້ານ້ອຍ,[54]ແລະນ້ຳໄດ້ໄຫລຖ້ວມຫົວຂອງຂ້ານ້ອຍ. ຂ້ານ້ອຍກ່າວວ່າ, "ຂ້ານ້ອຍເຖິງຈຸດຈົບແລ້ວ!"
[55]ຂ້ານ້ອຍຮ້ອງຫາພຣະນາມຂອງພຣະອົງ, ພຣະຢາເວ, ຈາກເບື້ອງລຸ່ມຂອງຂຸມເລິກ.[56]ພຣະອົງຍິນສຽງຂອງຂ້ານ້ອຍ
ເມື່ອຂ້ານ້ອຍອ້ອນວອນວ່າ,
"ຂໍຢ່າປິດຫູຂອງພຣະອົງຈາກຄຳຮ້ອງຂໍການຊ່ວຍເຫລືອຂອງຂ້ານ້ອຍ."[57]ພຣະອົງໄດ້ມາໃກ້ເມື່ອຂ້ານ້ອຍໄດ້ຮ້ອງຫາພຣະອົງ;
ພຣະອົງໄດ້ກ່າວວ່າ, "ຢ່າຢ້ານເລີຍ."
[58]ໂອ້, ພຣະຜູ້ເປັນເຈົ້າ, ພຣະອົງຮັບຄຳຮ້ອງຂອງຂ້ານ້ອຍ, ພຣະອົງໄດ້ຊ່ວຍຊີວິດຂອງຂ້ານ້ອຍ![59]ພຣະຢາເວ,
ພຣະອົງໄດ້ເຫັນຄວາມຜິດທີ່ພວກເຂົາເຫັນແກ່ຂ້ານ້ອຍ; ຂໍໃຫ້ຄວາມເປັນທັມແກ່ຂ້ານ້ອຍ.[60]ພຣະອົງໄດ້ເຫັນການຫມິ່ນປະຫມາດ,


generated on Tue Jun 17 19:01:42 2025

ສິ່ງທັງຫມົດທີ່ພວກເຂົາຄິດກັນເພື່ອຕໍ່ສູ້ຂ້ານ້ອຍ.[61]ພຣະອົງໄດ້ຍິນຄໍາຮ້ອງຂອງຂ້ານ້ອຍ, ໂອ້ພຣະຢາເວ,
ແລະສິ່ງທັງຫມົດທີ່ພວກເຂົາຄິດກັນຕໍ່ສູ້ຂ້ານ້ອຍ.
[62]ຮີມສົບທີ່ກ່າວໃສ່ຮ້າຍຂ້ານ້ອຍ ແລະຄໍາກ່າວຕໍ່ສູ້ຂ້ານ້ອຍຂອງພວກເຂົາຫມົດມື້.[63]ໂຜດເບິ່ງວິທີທີ່ພວກເຂົາຈະລຸກຂຶ້ນ ແລະນັ່ງລົງ;
ພວກເຂົາໄດ້ຮ້ອງເພງທັງຫລາຍຂອງພວກເຂົາຖາກຖາງຂ້ານ້ອຍ.
[64]ໂອ້ພຣະຢາເວ, ຂໍຊົງສະຫນອງຄືນພວກເຂົາ, ໃຫ້ສົມກັບສິ່ງທີ່ມືຂອງພວກເຂົາໄດ້ເຮັດ.[65]ຂໍພຣະອົງໃຫ້ໃຈຂອງພວກເຂົາບໍ່ອາຍ!
ຂໍໃຫ້ຄໍາສາບແຊ່ງຂອງພຣະອົງຕົກໃສ່ພວກເຂົາ![66]ຂໍພຣະອົງໄລ່ຕາມພວກເຂົາດ້ວຍຄວາມໂກດຮ້າຍຂອງພຣະອົງ
ແລະທໍາລາຍລ້າງພວກເຂົາຈາກພາຍໃຕ້ຟ້າສະຫວັນເຖີ້ນ, ພຣະຢາເວ.

 generated on Tue Jun 17 19:01:42 2025

4 [1]ຄຳໄດ້ມົວຫມອງລົງແລ້ວຫນໍ; ຄຳບໍຣິສຸດທີ່ສຸດໄດ້ປ່ຽນໄປເສັ້ຽແລ້ວ! ອັນຍະມະນີສັກສິດໄດ້ກະຈັດກະຈາຍຢູ່ທຸກແຈຂອງຖະຫນົນ.
[2]ບັນດາລູກຊາຍຫົວແກ້ວຫົວແຫວນແຫ່ງຊີໂອນ ຊຶ່ງເຄີຍສູງຄ່າທຽບກັບຄຳບໍຣິສຸດ, ແຕ່ບັດນີ້ພວກເຂົາມີຄ່າບໍ່ຫລາຍໄປກວ່າຫມໍ້ດິນ,
ຜົນງານຈາກມືຂອງຊ່າງປັ້ນຫມໍ້!

[3]ເຖິງແມ່ນຫມາໄນຍັງໃຫ້ນົມຝູງຝັກລູກໆຂອງມັນ, ແຕ່ລູກສາວຂອງປະຊາຊົນຂອງຂ້ານ້ອຍກັບໃຈດຳ,
ເຫມືອນຝູງນົກກະຈອກເທດໃນທະເລຊາຍ.
[4]ລີ້ນຂອງເດັກແດງແຫ້ງ ຕິດເພດານປາກເພາະຄວາມຫິວນ້ຳ; ເດັກນ້ອຍໄດ້ຮ້ອງຂໍອາຫານ, ແຕ່ບໍ່ມີໃຜເອົາໃຫ້ພວກເຂົາ.
[5]ບັນດາຜູ້ທີ່ເຄີຍກິນອາຫານຊັ້ນເລີດ ບັດນີ້ກໍອຶດຢາກຢູ່ຕາມຖະຫນົນທັງຫລາຍ; ບັນດາຜູ້ຄົນທີ່ຖືກລ້ຽງໃຫ້ນຸ່ງຜ້າສີມ່ວງນັ້ນ,
ແຕ່ບັດນີ້ນອນເລືອຢູ່ກອງຂີ້ເຫຍື່ອ.
[6]ໂທດກັມຂອງລູກສາວຂອງປະຊາຊົນຂອງຂ້ານ້ອຍນັ້ນ ໃຫຍ່ກວ່າໂທດກັມຂອງເມືອງໂຊໂດມ, ແລະຊຶ່ງຖືກໂຄ່ນລົ້ມໃນຊົ່ວພິບຕາດຽວ
ແລະບໍ່ມີໃຜຍື່ນມືເຂົ້າມາຊ່ວຍນາງເລີຍ.
[7]ບັນດາຜູ້ນຳຂອງນາງຂາວຍິ່ງກວ່າຫິມະ, ຂາວຍິ່ງກວ່ານ້ຳນົມ; ຮ່າງກາຍຂອງພວກເຂົາສົດໃສຍິ່ງກວ່າທັບທິມ,
ຮູບຮ່າງຫນ້າຕາສະຫງ່າງາມດັ່ງອັນຍະມະນີ.[8]ແຕ່ບັດນີ້ຜິວພັນຂອງພວກເຂົາດຳຄ້ຳຍິ່ງກວ່າຂີ້ຄວັນໄຟ;
ພວກເຂົາຢູ່ຕາມຖະຫນົນໂດຍບໍ່ມີໃຜຈື່ໄດ້. ຜິວຫນັງຂອງເຂົາຫ່ຽວແຫ້ງໃນກະດູກຂອງພວກເຂົາ; ມັນຈ່ອຍຜອມຫລາຍຈົນຫນັງຕິດກະດູກ.
[9]ບັນດາຄົນທີ່ຖືກຂ້າດ້ວຍຄົມດາບ ຍັງດີກວ່າຄົນທີ່ຕາຍຍ້ອນຄວາມອຶດຢາກ, ຊຶ່ງໄດ້ທົນທຸກທໍຣະມານ, ເພາະບໍ່ມີການເກັບກ່ຽວຈາກທົ່ງນາ.
[10]ມືຂອງຍິງທີ່ເຕັມໄປດ້ວຍຄວາມຮັກ ໄດ້ຕົ້ມລູກຂອງພວກນາງເອງ ລູກໄດ້ກາຍມາເປັນອາຫານຂອງພວກນາງໃນອຶດຢາກນີ້
ເມື່ອລູກສາວຂອງປະຊາຊົນຂອງຂ້ານ້ອຍຖືກທຳລາຍ.
[11]ພຣະຢາເວໄດ້ສຳແດງຄວາມໂກດຮ້າຍຂອງພຣະອົງ; ພຣະອົງໄດ້ລະບາຍຄວາມໂກດຮ້າຍອັນຮຸນແຮງອອກມາ.
ພຣະອົງໄດ້ຈູດໄຟຂຶ້ນໃນຊີໂອນ ເພື່ອເຜົາຜານຮາກຖານຂອງເມືອງນີ້.
[12]ບໍ່ມີກະສັດອົງໃດເຊື່ອ, ຫລືບໍ່ມີຜູ້ໃດຢູ່ອາໄສໃດໆທົ່ວໂລກນີ້ເຊື່ອ, ວ່າສັດຕຣູ
ຫລືຄູ່ແຂ່ງຈະສາມາດລ່ວງລ້ຳຜ່ານປະຕູນະຄອນເຢຣູຊາເລັມເຂົ້າມາໄດ້.[13]ສິ່ງນີ້ໄດ້ເກີດຂຶ້ນ
ເພາະວ່າຄວາມບາບທັງຫລາຍຂອງບັນດາຜູ້ທຳນວາຍຂອງນາງ ແລະ ຄວາມຊົ່ວຮ້າຍຂອງເຫລົ່າປະໂລຫິດ ຊຶ່ງເຮັດໃຫ້ເລືອດຂອງຄົນຊອບທັມ
ໄຫລນອງຢູ່ກາງເມືອງຂອງນາງ.
[14]ພວກເຂົາໄດ້ເດີນທາງພະເນຈອນ, ເຫມືອນຄົນຕາບອດ, ຜ່ານຖະຫນົນ. ພວກເຂົາໄດ້ເປື້ອນໄປດ້ວຍເລືອດ
ຈົນບໍ່ມີໃຜກ້າແຕະຕ້ອງເສື້ອຜ້າຂອງພວກເຂົາ.[15]ປະຊາຊົນຮ້ອງໃສ່ພວກເຂົາວ່າ. "ຫນີໄປ! ເຈົ້າຄົນຜູ້ບໍ່ສະອາດ!" "ຫນີໄປ! ຫນີໄປ!
ຢ່າໄດ້ແຕະຕ້ອງພວກເຂົາ! "ດັ່ງນັ້ນພວກເຂົາຈຶ່ງພະເນຈອນໄປ; ປະຊາຊົນເວົ້າກັນທ່າມກາງຊາດຕ່າງໆວ່າ, "ພວກເຂົາຢູ່ບ່ອນນີ້ຕໍ່ໄປບໍ່ໄດ້."
[16]ພຣະຢາເວເອງນີ້ແຫລະໄດ້ຊົງເຮັດໃຫ້ພວກເຂົາແຕກຊະຊາຍໄປ; ພຣະອົງບໍ່ໄດ້ເບິ່ງແຍງພວກເຂົາອີກແລ້ວ.
ພວກເຂົາບໍ່ໃຫ້ກຽດປະໂລຫິດອີກ, ແລະພວກເຂົາບໍ່ໄດ້ນິຍົມຊົມຊອບຜູ້ອາວຸໂສອີກຕໍ່ໄປ.
[17]ດວງຕາຂອງພວກເຮົາກໍອ່ອນລ້າ, ເບິ່ງຫາຄວາມຊ່ວຍເຫລືອຈາກເຂົາບໍ່ໄດ້; ຈາກຫໍຄອຍຂອງພວກເຮົາ ພວກເຮົາເຝົ້າເບິ່ງຊົນຊາດຫນຶ່ງ
ຊຶ່ງບໍ່ສາມາດຊ່ວຍເຫລືອພວກເຮົາໄດ້.[18]ພວກເຂົາໄດ້ໄລ່ຕິດຕາມຮອຍທາງຍ່າງຂອງພວກເຮົາ,
ພວກເຮົາບໍ່ສາມາດຍ່າງຕາມທາງຂອງພວກເຮົາໄດ້. ຈຸດຈົບຂອງພວກເຮົາໃກ້ເຂົ້າມາແລ້ວ ແລະ ວັນເວລາຂອງພວກເຮົາໄດ້ໃກ້ຄົບກຳນົດແລ້ວ,
ເພາະຈຸດຈົບຂອງພວກເຮົາໄດ້ມາເຖິງແລ້ວ.
[19]ຄົນທີ່ຕາມລ່າພວກເຮົາ ໄວຍິ່ງກວ່າບັນດານົກອິນຊີຢູ່ເທິງຟ້າ. ພວກເຂົາໄດ້ບຸກໄລ່ພວກເຮົາເທິງພູຕ່າງໆ
ແລະດັກພວກເຮົາຢູໃນຖິ່ນແຫ້ງແລ້ງກັນດານ.[20]ເຈົ້າຊີວິດຂອງພວກເຮົາ —ຄືພຣະຢາເວຜູ້ທີ່ເຈີມແລ້ວ—
ພຣະອົງເປັນຜູ້ດຽວທີ່ດັກຈັບພວກເຂົາໃຫ້ຕິດຢູ່ໃນກັບດັກຕ່າງໆຂອງພວກເຂົາ; ທີ່ພວກເຂົາເຄີຍເວົ້າວ່າ, "ໃຕ້ຮົ່ມເງົາຂອງເຂົາ
ພວກເຮົາຈຶ່ງມີຊີວິດຢູ່ທ່າມກາງຂອງບັນດາປະຊາຊາດ."
[21]ລູກສາວແຫ່ງເອໂດມເອີຍ, ຜູ້ອາໄສຢູ່ໃນດິນແດນອູເຊ, ຊື່ນຊົມແລະຍິນດີໄປເຖີດ. ແຕ່ສຳລັບເຈົ້າ
ຈອກແຫ່ງຄວາມໂກດຮ້າຍກໍວຽນໄປເຖິງເຈົ້າ; ເຈົ້າຈະເມົາ ແລະ ເຈົ້າເອງຈະເປືອຍກາຍລ່ອນຈ້ອນ.[22]ລູກສາວແຫ່ງຊີໂອນເອີຍ
ການລົງໂທດຂອງເຈົ້າໃກ້ຈະເຖິງທີ່ສິ້ນສຸດແລ້ວ, ພຣະອົງຈະບໍ່ປ່ອຍໃຫ້ເຈົ້າຕົກເປັນຊະເລີຍຢູ່ຢ່າງນີ້ດົນດອກ ແຕ່ລູກສາວແຫ່ງເອໂດມເອີຍ;
ພຣະອົງຈະລົງໂທດບາບຂອງເຈົ້າ, ແລະພຣະອົງຈະເປີດເຜີຍຄວາມບາບທັງຫລາຍຂອງເຈົ້າ.

 generated on Tue Jun 17 19:01:42 2025

5
1ຂໍຊົງຣະນຶກ, ໂອຂ້າແດ່ພຣະຢາເວ, ໃນສິ່ງທີ່ເກີດຂຶ້ນແກ່ຂ້ານ້ອຍທັງຫລາຍ ເບິ່ງເຖີດ ແລະ
ຂໍຊົງພິຈາຣະນາເບິ່ງຄວາມອັດສູຂອງພວກຂ້ານ້ອຍທັງຫລາຍ.2ມໍຣະດົກຂອງພວກຂ້ານ້ອຍທັງຫລາຍກັບເປັນຂອງຄົນແປກຫນ້າ;
ບັນດາເຮືອນຂອງພວກຂ້ານ້ອຍເປັນຂອງພວກຕ່າງດ້າວ.3ພວກຂ້ານ້ອຍໄດ້ກາຍເປັນບັນດາລູກກຳພ້າ, ບໍ່ມີພໍ່,
ແລະແມ່ຂອງພວກນ້ອຍທັງຫລາຍກໍເປັນດັ່ງແມ່ຫມ້າຍ.4ພວກຂ້ານ້ອຍຕ້ອງຈ່າຍເງິນຊື້ນ້ຳໃຫ້ພວກເຮົາດື່ມ, ແລະ ພວກຂ້ານ້ອຍຕ້ອງຈ່າຍເງິນ
ຊື້ຟືນຂອງພວກຂ້ານ້ອຍໃຊ້ເອງ.

5ຜູ້ຄົນເຫລົ່ານັ້ນທີ່ໄລ່ຕິດຕາມພວກຂ້ານ້ອຍນັ້ນ ໃກ້ພວກຂ້ານ້ອຍເຂົ້າມາແລ້ວ; ພວກຂ້ານ້ອຍທັງອ່ອນເພັຽ
ແລະພວກຂ້ານ້ອຍບໍ່ໄດ້ພັກຜ່ອນເລີຍ.6ພວກຂ້ານ້ອຍຍອມຈຳນົນຕົນເອງຕໍ່ຊາວ ອີຢິບ ແລະ ຊາວອັດຊີເລັຽເພື່ອຈະໄດ້ອາຫານພໍກິນ.
7ບັນດາບັນພະບູຣຸດຂອງຂ້ານ້ອຍທັງຫລາຍເຮັດບາບ, ແລະພວກເຂົາບໍ່ຢູ່ແລ້ວ, ແລະພວກຂ້ານ້ອຍຕ້ອງຮັບໂທດເພາະບາບຂອງພວກເຂົາແທນ.
8ພວກທາດປົກຄອງເຫນືອພວກຂ້ານ້ອຍທັງຫລາຍ, ແລະບໍ່ມີໃຜຊ່ວຍພວກຂ້ານ້ອຍໃຫ້ພົ້ນຈາກມືຂອງພວກເຂົາໄດ້.
9ພວກຂ້ານ້ອຍໄດ້ອົດອາຫານມາໂດຍສ່ຽງຊີວິດຂອງພວກຂ້ານ້ອຍ, ຍ້ອນຄົມດາບໃນຖິ່ນແຫ້ງແລ້ງກັນດານ.
10ຜິວຫນັງຂອງພວກຂ້ານ້ອຍກໍຮ້ອນປານເຕົາອົບ ເພາະຄວາມຮ້ອນເຜົາຜານແຫ່ງຄວາມອຶດຫິວອາຫານ.
11ຜູ້ຍິງໃນຊີໂອນຖືກຂົ່ມໃຈ, ແລະລວມທັງສາວບໍຣິສຸດໃນເມືອງຕ່າງໆຂອງຢູດາ.
12ຜູ້ປົກຄອງເມືອງຕ້ອງຖືກມັດມືໂດຍແຂວນໄວ້ດ້ວຍມືຂອງຕົນເອງ, ແລະບໍ່ມີໃຜນັບຖືພວກຜູ້ອາວຸໂສອີກແລ້ວ.
13ພວກຄົນຫນຸ່ມຖືກບັງຄັບໃຫ້ໂມ້ແປ້ງດ້ວຍຫີນໂມ້, ແລະພວກເດັກຊາຍຕ້ອງເດີນໂຊເຊເພາະແບກຟືນຫນັກ.
14ພວກຜູ້ອາວຸໂສຫາຍໄປຈາກປະຕູເມືອງ, ແລະພວກຄົນຫນຸ່ມໄດ້ຢຸດຫລິ້ນດົນຕຣີຂອງພວກເຂົາແລ້ວ.
15ຄວາມຍິນດີລົ້ນກໍຫາຍໄປຈາກໃຈຂອງພວກຂ້ານ້ອຍ ແລະການເຕັ້ນລຳຂອງພວກຂ້ານ້ອຍກາຍເປັນການໄວ້ທຸກ.
16ມົງກຸດໄດ້ຕົກຈາກຫົວຂອງພວກຂ້ານ້ອຍ; ແລ້ວວິບັດກໍມີແກ່ພວກຂ້ານ້ອຍ, ເພາະພວກຂ້ານ້ອຍໄດ້ເຮັດບາບ!
17ເພາະເຫດນີ້ຫົວໃຈຂອງພວກຂ້ານ້ອຍຈຶ່ງເຈັບປ່ວຍ, ແລະດວງຕາຂອງພວກຂ້ານ້ອຍຈຶ່ງມົວໄປ,
ເພາະສິ່ງເຫລົ່ານີ້ດວງຕາຂອງພວກເຮົາຈຶ່ງມືດມົວໄປ18ເພາະພູຊີໂອນຮົກຮ້າງເພພັງ, ດ້ວຍຝູງຫມາໄນທີ່ທ່ຽວໄປມາຢູ່ບ່ອນນັ້ນ.
19ໂອ ຂ້າແດ່ພຣະຢາເວ, ຂໍພຣະອົງຊົງຄອບຄອງຢູ່ເປັນນິດ, ແລະ ພຣະອົງຈະນັ່ງເທິງບັນລັງຂອງພຣະອົງ ຈາກຄົນຮຸ່ນຫນຶ່ງໄປສູ່ອີກຮຸ່ນຫນຶ່ງ.
20ດ້ວຍເຫດໃດ ພຣະອົງຈຶ່ງລືມພວກຂ້ານ້ອຍເປັນນິດ? ດ້ວຍເຫດໃດ ຈຶ່ງຊົງປະຖິ້ມພວກຂ້ານ້ອຍດົນປານນີ້?21ຂ້າແດ່ພຣະຢາເວ,
ຂໍຊ່ວຍເຫລືອພວກຂ້ານ້ອຍໃຫ້ກັບສູ່ພຣະອົງດ້ວຍເຖີດ, ແລະຂໍຊົງຟື້ນຟູວັນເວລາຂອງຂ້ານ້ອຍໃຫ້ຄືດັ່ງແຕ່ກ່ອນ —
22ເວັ້ນແຕ່ພຣະອົງຈະປັດພວກຂ້ານ້ອຍຖິ້ມຢ່າງເດັດຂາດເສັຽແລ້ວ ແລະ ພຣະອົງໂມໂຫຮ້າຍພວກຂ້ານ້ອຍຢ່າງເຫລືອຫລາຍແລ້ວ.

# ເອເຊກຽນ

1 1ໃນວັນທີຫ້າເດືອນສີ່, ປີທີສາມສິບ, ສິ່ງທີ່ໄດ້ເກີດຂຶ້ນ, ຂະນະທີ່ຂ້ານ້ອຍຢູ່ກັບພວກຊະເລີຍທີ່ແມ່ນ້ຳເກບາກ. ທ້ອງຟ້າໄດ້ເປີດອອກ, ແລະ
ຂ້ານ້ອຍໄດ້ເຫັນນິມິດຂອງພຣະເຈົ້າ.2ໃນວັນທີຫ້າຂອງເດືອນນັ້ນ — ຄືໃນປີທີຫ້າທີ່ກະສັດເຢໂຮອາກີນຖືກຈັບໄປເປັນຊະເລີຍ. —
3ພຣະຄຳຂອງພຣະຢາເວ ໄດ້ມາຍັງ ເອເຊກຽນລູກຊາຍຂອງປະໂລຫິດບູຊີ, ຢູ່ແຄມແມ່ນ້ຳເກບາກໃນປະເທດບາບີໂລນ,
ແລະພຣະຫັດຂອງພຣະຢາເວໄດ້ມາຢູ່ເຫນືອທ່ານທີ່ນັ້ນ.

4ເມື່ອຂ້ານ້ອຍໄດ້ຫລຽວເບິ່ງ, ແລະ ໄດ້ມີລົມພະຍຸພັດມາຈາກທາງເຫນືອ; ມີເມກກ້ອນໃຫຍ່ກັບຟ້າແມບເຫລື້ອມ ແລະ
ມີຄວາມສະຫວ່າງໂດຍຮອບ, ແລະ ໃນເມກນັ້ນມີແສງເຫມືອນໄຟສີອຳພັນ.5ໃນໃຈກາງໄຟນັ້ນມີຮູບລັກສະນະຂອງສິ່ງມີຊີວິດສີ່ໂຕ.
ຮູບຮ່າງລັກສະນະຂອງພວກມັນເປັນດັ່ງນີ້: ມີຮູບລັກສະນະຂອງມະນຸດ,6ແຕ່ພວກມັນລະໂຕມີຫນ້າສີ່ຫນ້າ, ແລະ ມີປີກສີ່ປີກ.
7ຂາຂອງພວກມັນນັ້ນຊື່ກົງ, ແຕ່ຝ່າຕີນຂອງມັນຄືກັບຕີນງົວ ແລະ ເຫລື້ອມຄືກັບທອງເຫລືອງ.8ແຕ່ພວກມັນມີມືມະນຸດຢູ່ກ້ອງປີກຂອງມັນທັງ
ສີ່ຂ້າງ. ທັງສີ່ໂຕ, ຕ່າງມີຫນ້າ ແລະ ມີປີກເຊັ່ນນີ້:9ຄືປີກທັງສອງຂອງສິ່ງທີ່ມີຊີວິດເຫລົ່ານັ້ນ ຕ່າງກໍພໍປີກຂອງສິ່ງທີ່ມີຊີວິດອອກໄປຈຸກັນກັບໂຕອື່ນ,
ແລະ ພວກມັນບໍ່ເຫັນຫັນໄປທາງທີ່ພວກມັນມຸ້ງໄປ; ແຕ່ລະໂຕເຄື່ອນຍ້າຍໄປທາງຫນ້າ.
10ຮູບລັກສະນະໃບຫນ້າຂອງສິ່ງທີ່ມີຊີວິດເຫລົ່ານັ້ນຄື ດ້ານຫນ້າເປັນຫນ້າຄົນ. ຫນຶ່ງໃນສີ່ດ້ານຂອງໃບຫນ້ານັ້ນເຫມືອນຫນ້າສິງຢູ່ຂ້າງຂວາ,
ຫນຶ່ງໃນສີ່ຂອງໃບຫນ້າເຫມືອນຫນ້າງົວຢູ່ຂ້າງຊ້າຍ ແລະ ຫນຶ່ງໃນສີ່ຂອງໃບຫນ້າເຫມືອນຫນ້ານົກອິນຊີ.
11ໃບຫນ້າຂອງສິ່ງທີ່ມີຊີວິດເຫລົ່ານີ້ກໍເປັນເຊັ່ນນີ້ແຫລະ, ແລະ ສ່ວນປີກທັງຫລາຍນັ້ນພືອອກໄປ, ແຕ່ລະໂຕມີສອງປີກຈຸກັບປາຍປີກຂອງໂຕອື່ນ,
ແລະ ອີກປີກສອງປີກໄດ້ປົກຫຸ້ມໂຕມັນໄວ້.12ໂຕລະໂຕເຄື່ອນຫນ້າຊື່ໄປ, ເພື່ອວ່າພຣະວິຍານນຳພາພວກມັນໄປທາງໃດກໍຕາມ,
ພວກມັນກໍໄປທາງນັ້ນໂດຍບໍ່ຫັນກັບເລີຍ.
13ຮູບລັກສະນະ ແລະ ລັກສະນະຂອງສິ່ງທີ່ມີຊີວິດເຫລົ່ານັ້ນ, ເຫມືອນຖ່ານໄຟລຸກຂຶ້ນແຮງ, ລັກສະນະເຫມືອນຄ້າຍຄືໂຄມໄຟຫລາຍອັນ;
ສ່ອງໄຟສະຫວ່າງ ແລະ ເຄື່ອນໄຫວໄປມາລະຫວ່າງສິ່ງທີ່ມີຊີວິດເຫລົ່ານັ້ນ, ແລະ ມີແສງຟ້າແມບເຫລື້ອມອອກມາຈາກໄຟນັ້ນ.
14ສິ່ງທີ່ມີຊີວິດເຫລົ່ານັ້ນເຄື່ອນໄຫວໄປມາ, ແລະພວກມັນມີລັກສະນະຄືກັບຟ້າແມບເຫລື້ອມ!
15ແລ້ວເມື່ອຂ້ານ້ອຍຫລຽວເບິ່ງສິ່ງທີ່ມີຊີວິດເຫລົ່ານັ້ນ; ມີກົງລໍ້ອັນຫນຶ່ງຢູ່ທາງຂ້າງຂອງສິ່ງທີ່ມີຊີວິດເຫລົ່ານັ້ນ.16ລັກສະນະ ແລະ
ໂຄງສ້າງຂອງກົງລໍ້ເຫລົ່ານັ້ນ: ແຕ່ລະອັນຄືກັບແກ້ວເບລີ. ກົງລໍ້ທັງສີ່ມີຮູບລັກສະນະເຫມືອນກັນ, ມີລັກສະນະ ແລະ
ໂຄງສ້າງເຫມືອນກົງລໍ້ທີ່ຊ້ອນກັນຢູ່ກາງກົງລໍ້.
17ເມື່ອກົງລໍ້ເຄື່ອນໄປ, ແລະ ພວກມັນກໍໄປໂດຍບໍ່ຫັນໄປຕາມທິດທາງຂອງຫນ້າສິ່ງທີ່ມີຊີວິດເຫລົ່ານັ້ນເລີຍ.18ຂອບກົງລໍ້ເຫລົ່ານັ້ນສູງ, ແລະ ເປັນ-
ຕາຢ້ານຫລາຍ, ຂອບກົງລໍ້ທັງສີ່ເຕັມໄປດ້ວຍດວງຕາຢູ່ອ້ອມຮອບໆ.

[19]ເມື່ອສິ່ງທີ່ມີຊີວິດເຄື່ອນທີ່ໄປ, ກົງລໍ້ເຫລົ່ານັ້ນເຄື່ອນຕາມໄປນຳ. ເມື່ອສິ່ງທີ່ມີຊີວິດລອຍຂຶ້ນຈາກພື້ນດິນ, ກົງລໍ້ເຫລົ່ານັ້ນກໍຍ້າຍໄປນຳ.[20]ເມື່ອ
ພຣະວິຍານ ຈະໄປບ່ອນໃດ, ພວກມັນກໍໄປນຳ, ແລະ ກົງລໍ້ກໍລອຍໄປນຳພວກມັນ, ເພາະວິນຍານຂອງສິ່ງທີ່ມີຊີວິດເຫລົ່ານັ້ນຢູ່ໃນກົງລໍ້.
[21]ເມື່ອສິ່ງທີ່ມີຊີວິດທັງສີ່ເຄື່ອນໄປ, ກົງລໍ້ກໍເຄື່ອນໄປນຳ; ແລະ ເມື່ອສິ່ງທີ່ມີຊີວິດຢືນຂຶ້ນ; ກົງລໍ້ກໍຢືນຂຶ້ນນຳ; ເມື່ອສິ່ງທີ່ມີຊີວິດລອຍຂຶ້ນຈາກພື້ນດິນ,
ກົງລໍ້ກໍຈະລອຍຂຶ້ນໄປຢູ່ຂ້າງໆພວກມັນ, ເພາະວ່າວິຍານຂອງສິ່ງທີ່ມີຊີວິດຢູ່ໃນກົງລໍ້.
[22]ຢູ່ເທິງຫົວຂອງສິ່ງທີ່ມີຊີວິດເຫລົ່ານັ້ນ ໄດ້ມີລັກສະນະຄ້າຍຄືຮູບໂດມ; ເບິ່ງຄ້າຍຄືຍອດຊໍ່ຟ້າແກ້ວຜະນຶກສີສຸກໃສຢ່າງໜ້າຢ້ານກົວຢູ່
ເທິງຫົວຂອງພວກມັນ.[23]ພາຍໃຕ້ໂດມນີ້, ປີກຂອງສິ່ງທີ່ມີຊີວິດແຕ່ລະໂຕ ກໍພື່ອອກໄປຈຸກັບປາຍປີກອີກໂຕຫນຶ່ງ. ແຕ່ອີກສອງ
ປີກຂອງສິ່ງທີ່ມີຊີວິດແຕ່ລະໂຕໄດ້ປົກຫຸ້ມໂຕມັນໄວ້; ແຕ່ລະໂຕກໍໃຊ້ປີກອີກຄູ່ຫນຶ່ງປົກຫຸ້ມໂຕຂອງຕົນເອງໄວ້.
[24]ຂ້ານ້ອຍໄດ້ຍິນສຽງປີກຂອງພວກມັນ. ເຫມືອນກັບສຽງນ້ຳຢ່າງຫລວງຫລາຍ. ເຫມືອນກັບ
ສຽງຂອງອົງຜູ້ຊົງຣິດອຳນາດຍິ່ງໃຫຍ່ໃນເວລາດຳເນີນໄປ. ເຫມືອນສຽງຂອງພະຍຸຝົນ. ເຫມືອນສຽງຂອງກອງທັບ. ແລະເມື່ອພວກມັນຢືນນິ່ງ,
ພວກມັນຈະຮຸບປີກຂອງພວກມັນລົງ.[25]ແຕ່ຍັງມີສຽງອອກມາແຕ່ຂ້າງເທິງຂອງໂດມເຫນືອຫົວຂອງພວກມັນ ເມື່ອໃດກໍຕາມທີ່ພວກມັນຢືນນິ່ງ
ແລະ ປີກຂອງພວກມັນກໍຈະຮຸບລົງ.
[26]ຢູ່ເທິງຍອດຊໍ່ຟ້າ ທີ່ຢູ່ເຫນືອຫົວຂອງພວກມັນ ມີສິ່ງທີ່ມີຮູບລັກສະນະຂອງພຣະທີ່ນັ່ງ ຊຶ່ງມີລັກສະນະເຫມືອນແກ້ວມໍລະກົດ, ແລະ
ເທິງສິ່ງທີ່ມີລັກສະນະຂອງພຣະທີ່ນັ່ງນັ້ນ ກໍມີລັກສະນະເຫມືອນມະນຸດຢູ່ເທິງນັ້ນ.
[27]ຂ້ານ້ອຍໄດ້ເຫັນຮູບລັກສະນະທີ່ປະກົດເປັນໂລຫະສ່ອງແສງເຫລື້ອມເຫມືອນທອງສຳລິດຢູ່ໃນກາງກອງໄຟ
ໃນນັ້ນຈາກລຸ່ມແອວຂອງເຂົາຂຶ້ນໄປ; ຂ້ານ້ອຍໄດ້ເຫັນຈາກບັ້ນແອວຂອງເຂົາລົງມາ ມີລັກສະນະເຫມືອນໄຟ ແລະ ຄວາມສະຫວ່າງຮອບໆ.
[28]ມີແສງສະຫວ່າງໂດຍຮອບໆ ເຫມືອນລັກສະນະຂອງຮຸ້ງທີ່ປາກົດໃນເມກໃນມື້ທີ່ຝົນຕົກ.
ລັກສະນະແລະຮູບລັກສະນະຂອງພຣະສະຫງ່າຣາສີຂອງພຣະຢາເວ. ເປັນດັ່ງນີ້ແຫລະ ເມື່ອຂ້ານ້ອຍໄດ້ເຫັນແລ້ວ, ຂ້ານ້ອຍກໍໄດ້ຊົບຫນ້າ,
ແລະ ຂ້ານ້ອຍໄດ້ຍິນສຽງກຳລັງເວົ້າ.

 generated on Tue Jun 17 19:01:42 2025

2 [1]ພຣະອົງຊົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ຈົ່ງຢືນຂຶ້ນເຖີດ; ເຮົາຕ້ອງການເວົ້ານຳເຈົ້າ.”[2]ຂະນະທີ່
ພຣະອົງໄດ້ຊົງກ່າວແກ່ຂ້ານ້ອຍ, ພຣະວິນຍານໄດ້ສວມທັບຂ້ານ້ອຍ ແລະ ໄດ້ຊົງເຮັດໃຫ້ຂ້ານ້ອຍຢືນຂຶ້ນ. ແລະ
ຂ້ານ້ອຍໄດ້ຍິນພຣະອົງຊົງກ່າສແກ່ຂ້ານ້ອຍ.[3]ພຣະອົງໄດ້ກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ເຮົາຈະສົ່ງເຈົ້າໄປຍັງປະຊາຊົນ
ອິດສະຣາເອນ, ໄປຍັງເຊື້ອສາຍທີ່ມັກກະບົດ ຊຶ່ງໄດ້ທຳລະຍົດເຮົາ - ທັງພວກເຂົາ ແລະ ບັນພະບູລຸດຂອງພວກເຂົາ
ໄດ້ເຮັດຜິດບາບຕໍ່ສູ້ເຮົາຈົນເຖິງທຸກມື້ນີ້!

[4]ເຊື້ອສາຍຂອງພວກເຂົາເປັນຄົນແຂງກະດ້າງ ແລະ ໃຈແຂງ. ເຮົາຈະສົ່ງເຈົ້າໄປຫາພວກເຂົາ ແລະ ເຈົ້າຈົ່ງເວົ້າກັບພວກເຂົາວ່າ,
'ນີ້ເປັນພຣະຢາເວພຣະຜູ້ເຈົ້າຊົງກ່າວດັ່ງນີ້,'[5]ບໍ່ວ່າພວກເຂົາຈະຟັງ ຫລືປະຕິເສດກໍຕາມ. ພວກເຂົາກໍເປັນເຊື້ອສາຍທີ່ມັກກະບົດ,
ແຕ່ຢ່າງຫນ້ອຍພວກເຂົາຈະໄດ້ຮູ້ວ່າ ມີຜູ້ປະກາດພຣະຄຳຄົນຫນຶ່ງຢູ່ທ່າມກາງພວກເຂົາ.
[6]ສ່ວນເຈົ້າ, ບຸດແຫ່ງມະນຸດເອີຍ, ຢ່າຢ້ານກົວພວກເຂົາ ຫລືຄຳເວົ້າຂອງພວກເຂົາ. ຢ່າຢ້ານເລີຍ, ເຖິງແມ່ນວ່າ ພວກເຂົາຈະຢູ່ທ່າມກາງ
ຕົ້ນຫນາມ ແລະ ຫນາມແຫລມຈະຢູ່ກັບເຈົ້າ ແລະເປັນເຫມືອນແມງງອດຢູ່ອ້ອມຮອບເຈົ້າ. ຈົ່ງຢ່າຢ້ານຄຳເວົ້າພວກເຂົາ
ຫລືຕົກໃຈເພາະຫນ້າຂອງພວກເຂົາ, ເພາະວ່າພວກເຂົາເປັນເຊື້ອຊາດທີ່ມັກກະບົດ.
[7]ແຕ່ເຈົ້າຈົ່ງກ່າວພຣະຄຳຂອງເຮົາ, ເຖິງວ່າພວກເຂົາຈະຟັງ ຫລື ບໍ່ຟັງ, ເພາະພວກເຂົາເປັນເຊື້ອຊາດທີ່ມັກກະບົດ.[8]ແຕ່ສ່ວນເຈົ້າ, ບຸດແຫ່ງມະ-
ນຸດເອີຍ, ຈົ່ງຟັງສິ່ງທີ່ເຮົາກ່າວກັບເຈົ້າ. ຢ່າເປັນຄົນກະບົດເຫມືອນກັບເຊື້ອສາຍກະບົດນັ້ນ. ຈົ່ງອ້າປາກຂອງເຈົ້າ ແລະ ກິນສິ່ງທີ່ເຮົາເອົາໃຫ້ພວກ
ເຈົ້າ!”
[9]ເມື່ອຂ້ານ້ອຍໄດ້ຫລຽວເບິ່ງ, ແລະ ພຣະຫັດເບື້ອງຫນຶ່ງຢຽດອອກມາທາງຂ້ານ້ອຍ; ໃນພຣະຫັດນັ້ນມີຫນັງສືທີ່ຂຽນໄວ້ຢູ່ມ້ວນຫນຶ່ງ.
[10]ພຣະອົງໄດ້ຊົງໄຂຫນັງສືມ້ວນນັ້ນອອກມາຕໍ່ຫນ້າ ຂ້ານ້ອຍ; ມີຕົວຫນັງສືຂຽນໄວ້ທັງດ້ານຫນ້າ ແລະ ທາງດ້ານຫລັງ, ມີບົດຮ້ອງໄຫ້, ທຸກໂສກ
ແລະ ວິບັດ ຂຽນຢູ່ເທິງນັ້ນ.”

 generated on Tue Jun 17 19:01:42 2025

3 1ພຣະເຈົ້າຊົງກ່າວກັບຂ້ານ້ອຍຕໍ່ໄປວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງກິນຫນັງສືມ້ວນນີ້ ຊຶ່ງຢູ່ຕໍ່ຫນ້າເຈົ້າ. ກິນຫນັງສືມ້ວນນີ້, ແລ້ວ-
ໄປເວົ້າຕໍ່ເຊື້ອສາຍຂອງອິສຣາເອນ."2ດັ່ງນັ້ນ ຂ້ານ້ອຍຈຶ່ງໄດ້ອ້າປາກ, ແລະ ພຣະອົງຊົງຍື່ນຫນັງສືມ້ວນໃຫ້ຂ້ານ້ອຍກິນ.3ພຣະອົງຊົງ
ກ່າວກັບຂ້ານ້ອຍອີກວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງເຮັດໃຫ້ທ້ອງຂອງເຈົ້າອີ່ມ ແລະ ກິນຫນັງສືມ້ວນທີ່ເຮົາມອບໃຫ້ແກ່ເຈົ້າ!" ດັ່ງນັ້ນ ຂ້ານ້ອຍ
ກິນ, ແລະ ຫນັງສືມ້ວນນັ້ນ ມັນມີລົດຫວານເຫມືອນນ້ຳເຜີ້ງໃນປາກຂອງຂ້ານ້ອຍ.

4ຕໍ່ມາພຣະເຈົ້າຊົງກ່າວກັບຂ້ານ້ອຍວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງໄປຫາປະຊາຊົນອິດສະຣາເອນ ແລະ
ກ່າວພຣະຄຳຂອງເຮົາໃຫ້ພວກເຂົາຟັງ.5ເຮົາຈະບໍ່ສົ່ງເຈົ້າໄປຫາຊົນຊາດທີ່ເວົ້າພາສາຕ່າງປະເທດ ແລະ ຍາກໆ, ແຕ່ຈະສົ່ງໄປຫາເຊື້ອສາຍຂອງ
ອິດສະຣາເອນ—6ເຮົາຈະບໍ່ໄດ້ສົ່ງເຈົ້າໄປຫາຊົນຊາດທີ່ມີອຳນາດ ທີ່ເວົ້າພາສາຕ່າງປະເທດ ຫລື ພາສາຍາກໆ, ຊຶ່ງເຈົ້າຟັງບໍ່ເຂົ້າໃຈ!
ເຖິງເຮົາສົ່ງເຈົ້າໄປຫາຄົນພວກນັ້ນ, ພວກເຂົາກໍຈະຟັງເຈົ້າ.7ແຕ່ປະຊາຊົນອິດສະຣາເອນ ຈະບໍ່ຍອມຟັງເຈົ້າ,
ເພາະພວກເຂົາບໍ່ເຕັມໃຈຈະຟັງເຮົາ. ເພາະວ່າເຊື້ອສາຍອິດສະຣາເອນທັງຫມົດນັ້ນເປັນຄົນແຂງກະດ້າງ ແລະ ໃຈແຂງ.
8ເບິ່ງເຖີດ! ເຮົາໄດ້ເຮັດໃຫ້ຫນ້າຂອງເຈົ້າແຂງກະດ້າງເຫມືອນພວກເຂົາ ແລະ ເຮັດໃຫ້ຫນ້າຜາກຂອງເຈົ້າແຂງເຊັ່ນຫນ້າຜາກຂອງພວກເຂົາ.
9ເຮົາຈະເຮັດໃຫ້ຫນ້າຜາກແຂງກວ່າເພັດ, ແຂງຍິ່ງກວ່າຫີນເຫລັກໄຟ! ຢ່າຢ້ານກົວພວກເຂົາ, ຫລືທໍ້ຖອຍໃຈດ້ວຍສີຫນ້າຂອງພວກເຂົາ,
ເພາະພວກເຂົາເປັນເຊື້ອສາຍທີ່ກະບົດ."
10ແລ້ວພຣະອົງຊົງກ່າວກັບຂ້ານ້ອຍວ່າ, "ບຸດແຫ່ງມະນຸດເອີຍ, ທຸກຖ້ອຍຄຳທີ່ເຮົາກ່າວແກ່ເຈົ້ານັ້ນ—ຈົ່ງຈົດຈຳໃຫ້ຂື້ນໃຈ ແລະ
ຈົ່ງຟັງດ້ວຍຫູຂອງເຈົ້າໃຫ້ດີ!11ແລ້ວຈົ່ງໄປຫາພວກຊະເລີຍ, ຄືປະຊາຊົນຂອງເຈົ້ານັ້ນ, ແລະ ຈົ່ງບອກກັບພວກເຂົາວ່າ,
'ພຣະຢາເວເປັນຜູ້ຊົງກ່າວດັ່ງນີ້,' ເຖິງແມ່ນວ່າ ພວກເຂົາຈະຟັງຫລື ບໍ່ຟັງກໍຕາມ."
12ຕໍ່ມາ ພຣະວິນຍານຂອງພຣະເຈົ້າໄດ້ຍົກຂ້ານ້ອຍຂຶ້ນ, ແລະຂ້ານ້ອຍໄດ້ຍິນສຽງແຜ່ນດິນໄຫວອັນໃຫຍ່ຢູ່ທາງຫລັງຂ້ານ້ອຍ: "ຈົ່ງສັນລະເສີນ
ແດ່ພຣະສະຫງ່າຣາສີຂອງພຣະຢາເວຈາກສະຖານທີ່ປະທັບຂອງພຣະອົງ!"13ມີສຽງປີກສັດທັງຫລາຍຂອງສິ່ງມີຊີວິດ
ໃນຂະນະທີ່ພວກມັນສຳພັດກັນ, ແລະ ສຽງກົງລໍ້ທີ່ຢູ່ກັບສິ່ງທີ່ມີຊີວິດນັ້ນ, ແລະ ມີສຽງແຜ່ນດິນໄຫວອັນໃຫຍ່.
14ພຣະວິຍານໄດ້ຊົງຍົກຂ້ານ້ອຍຂຶ້ນ ແລະ ນຳຂ້ານ້ອຍໄປ, ແລະ ຂ້ານ້ອຍກໍໄດ້ໄປດ້ວຍຄວາມຂົມຂື່ນ ວິນຍານຈິດຂອງຂ້ານ້ອຍຄຽດແຄ້ນ,
ເພາະວ່າລິດທານຸພາບຂອງພຣະຢາເວໄດ້ຊົງບັງຄັບຢ່າງມີພະລັງຢູ່ເທິງຂ້ານ້ອຍ!15ດັ່ງນັ້ນ ຂ້ານ້ອຍຈຶ່ງໄປເຖິງບ່ອນພວກຊະເລີຍທີ່ອາໄສຢູ່ທີ່ເມືອງ
ເທນອາບິບ ແຄມແມ່ນ້ຳເກບາກ, ແລະ ຂ້ານ້ອຍໄດ້ພັກຢູ່ທີ່ນັ້ນທ່າມກາງພວກເຂົາເປັນເວລາເຈັດມື້, ດ້ວຍຄວາມຕົກຕະລຶງ.
16ເມື່ອຄົບເຈັດມື້ແລ້ວ ພຣະຄຳຂອງພຣະຢາເວໄດ້ມາເຖິງຂ້ານ້ອຍ, ຊົງກ່າວວ່າ,17"ບຸດແຫ່ງມະນຸດເອີຍ, ເຮົາຈະແຕ່ງຕັ້ງເຈົ້າໃຫ້ເປັນຄົນຍາມ
ເຊື້ອສາຍອິດສະຣາເອນ, ດັ່ງນັ້ນ ຈົ່ງຟັງຖ້ອຍຄຳຈາກປາກຂອງເຮົາ, ແລະ ກ່າວຄຳຕັກເຕືອນຈາກເຮົາແກ່ພວກເຂົາ.
18ເມື່ອເຮົາຈະບອກກັບຄົນຊົ່ວວ່າ, 'ເຈົ້າຈະຕ້ອງຕາຍແນ່ນອນ' ແລະ ເຈົ້າບໍ່ໄດ້ຕັກເຕືອນເຂົາ ຫລື
ບໍ່ໄດ້ກ່າວຕັກເຕືອນຄົນຊົ່ວໃຫ້ຈາກທາງຊົ່ວຂອງເຂົາ ເພື່ອຊ່ວຍຊີວິດເຂົາໄວ້ — ຄົນຊົ່ວຜູ້ນັ້ນກໍຈະຕາຍເສຍຍ້ອນບາບຂອງຕົນເອງ,
ແຕ່ເຮົາຈະຕ້ອງເອົາເລືອດຂອງເຂົາຈາກມືຂອງເຈົ້າ.19ແຕ່ຖ້າວ່າເຈົ້າໄດ້ຕັກເຕືອນຄົນຊົ່ວຮ້າຍແລ້ວ, ແລະ ເຂົາບໍ່ຫັນກັບຈາກຄວາມຊົ່ວຂອງເຂົາ
ຫລື ຈາກທາງຊົ່ວຂອງເຂົາ, ແລ້ວເຂົາຈະຕາຍຍ້ອນຄວາມຜິດບາບຂອງເຂົາ, ແຕ່ເຈົ້າຈະຊ່ວຍກູ້ຊີວິດຂອງຕົນເອງໃຫ້ພົ້ນ.
20ຖ້າຄົນຊອບທຳຜູ້ຫນຶ່ງຫັນກັບຈາກຄວາມຊອບທຳຂອງເຂົາ ແລະ ເຮັດການອະຍຸດຕິທຳ, ແລະ ເຮົາວາງແຮ້ວໄວ້ຕໍ່ຫນ້າເຂົາ,
ເຂົາຈະຕ້ອງຕາຍ. ຍ້ອນວ່າເຈົ້າບໍ່ໄດ້ຕັກເຕືອນເຂົາ, ເຂົາຈະຕາຍຍ້ອນການເຮັດບາບນັ້ນ, ແລະ ເຮົາຈະບໍ່ລະນຶກເຖິງຄວາມຊອບທຳທີ່ເຂົາໄດ້
ເຮັດມາ, ແຕ່ເຮົາຈະເອົາເລືອດຂອງເຂົາຈາກມືຂອງເຈົ້າ.21ແຕ່ຖ້າເຈົ້າໄດ້ຕັກເຕືອນຄົນຊອບທຳນັ້ນໃຫ້ເຂົາບໍ່ເຮັດບາບອີກຕໍ່ໄປເພື່ອເຂົາ-
ຈະບໍ່ມີບາບ, ເຂົາຈະມີຊີວິດຢູ່ຢ່າງແນ່ນອນເພາະວ່າເຂົາຮັບຄຳຕັກເຕືອນ; ແລະ ເຈົ້າກໍຊ່ວຍກູ້ຊີວິດຂອງຕົນເອງໃຫ້ພົ້ນ."
22ດັ່ງນັ້ນ ພຣະຫັດຂອງພຣະຢາເວມາຢູ່ເທິງຂ້ານ້ອຍ, ແລະພຣະອົງຊົງກ່າວກັບຂ້ານ້ອຍວ່າ, "ຈົ່ງລຸກຂຶ້ນ! ແລ້ວອອກໄປຍັງຮ່ອມພູ, ແລະ ເຮົາຈະ
ເວົ້າກັບເຈົ້າຢູ່ທີ່ນັ້ນ!"23ດັ່ງນັ້ນ ຂ້ານ້ອຍຈຶ່ງອອກໄປໃນທີ່ນັ້ນ, ພຣະສະຫງ່າຣາສີຂອງພຣະຢາເວກໍຢູ່ທີ່ນັ້ນ,
ເຫມືອນກັບພຣະສະຫງ່າຣາສີຊຶ່ງຂ້ານ້ອຍໄດ້ເຫັນຢູ່ແຄມແມ່ນ້ຳເກບາກ; ສະນັ້ນ ຂ້ານ້ອຍໄດ້ຫມູບຫນ້າລົງ.
24ພຣະວິນຍານໄດ້ສະເດັດລົງມາຫາຂ້ານ້ອຍ ແລະ ໄດ້ເຮັດໃຫ້ຂ້ານ້ອຍຢືນຂຶ້ນ; ແລະ ພຣະອົງຊົງກ່າວກັບຂ້ານ້ອຍວ່າ, ແລະມະນຸດເອີຍ,
"ຈົ່ງໄປແລະ ຂັງຕົວເອງໄວ້ໃນເຮືອນຂອງເຈົ້າ,25ບັດນີ້, ບຸດແຫ່ງມະນຸດເອີຍ, ພວກເຂົາຈະເອົາເຊືອກພັນເຈົ້າ ແລະ ມັດເຈົ້າໄວ້
ເພື່ອວ່າເຈົ້າຈະບໍ່ໄດ້ອອກໄປຢູ່ທ່າມກາງພວກເຂົາໄດ້.
26ເຮົາຈະເຮັດໃຫ້ລີ້ນຂອງເຈົ້າຕິດກັບເພດານປາກຂອງເຈົ້າ, ດັ່ງນັ້ນ ເຈົ້າຈະປາກບໍ່ໄດ້, ແລະ ເຈົ້າຈະບໍ່ສາມາດກ່າວເຕືອນພວກເຂົາ,
ເພາະວ່າເຂົາທັງຫລາຍເປັນເຊື້ອສາຍກະບົດ.27ແຕ່ເມື່ອເຮົາເວົ້າກັບເຈົ້າ, ເຮົາຈະເປີດປາກຂອງເຈົ້າ ເພື່ອວ່າເຈົ້າຈະເວົ້າກັບພວກເຂົາວ່າ,'
ພຣະຢາເວຊົງກ່າວດັ່ງນີ້, "ຜູ້ທີ່ໄດ້ຍິນກໍຈະໄດ້ຍິນ; ແລະ ຜູ້ທີ່ບໍ່ຢາກຟັງກໍຈະບໍ່ຟັງ, ເພາະວ່າພວກເຂົາທັງຫລາຍເປັນເຊື້ອຊາດກະບົດ!"

 generated on Tue Jun 17 19:01:42 2025

# 4

[1]ແຕ່ເຈົ້າ, "ບຸດແຫ່ງມະນຸດເອີຍ, ຈົ່ງເອົາກ້ອນດິນຈີ່ມາວາງໄວ້ຕໍ່ຫນ້າເຈົ້າ. ແລະ ແກະຮູບນະຄອນເຢຣູຊາເລັມໄວ້ເທິງນັ້ນ.
[2]ແລ້ວວາງອ້ອມນະຄອນນັ້ນໄວ້ ແລະ ສ້າງປ້ອມປາການອ້ອມໄວ້ຮອບນະຄອນນັ້ນດ້ວຍ. ກໍ່ກອງດິນໄວ້ເປັນເນີນຕໍ່ສູ້ນະຄອນນັ້ນ ແລະ ຕັ້ງຄ້າຍ
ພັກອ້ອມນະຄອນນັ້ນໄວ້. ຈົ່ງຕັ້ງເຄື່ອງທຳລາຍກຳແພງໄວ້ຮອບນະຄອນ.[3]ແລ້ວເຈົ້າຈົ່ງເອົາແຜ່ນເຫລັກມາໄວ້ສຳລັບໂຕເຈົ້າ ແລະ
ເຮັດໃຫ້ມັນເປັນກຳແພງເຫລັກລະຫວ່າງເຈົ້າກັບນະຄອນນັ້ນ, ແລະ ຈົ່ງຫັນຫນ້າຂອງເຈົ້າຕໍ່ສູ້ນະຄອນນັ້ນ, ເພື່ອເຮັດໃຫ້ນະຄອນນັ້ນຖືກ
ອ້ອມໄວ້, ແລະ ເຈົ້າຈົ່ງອ້ອມນະຄອນນັ້ນໄວ້. ນີ້ເປັນຫມາຍສຳຄັນສຳລັບເຊື້ອສາຍອິດສະຣາເອນ.

[4]ແລ້ວ, ເຈົ້າຈົ່ງນອນສະແຄງເບື້ອງຊ້າຍ ແລະ ວາງຄວາມຜິດບາບແຫ່ງເຊື້ອສາຍອິດສະຣາເອນໄວ້ເຫນືອໂຕເຈົ້າ; ເຈົ້າ
ແບກຄວາມຜິດບາບຂອງພວກເຂົາຕາມຈຳນວນມື້ທີ່ເຈົ້າຕໍ່ສູ້ເຊື້ອຊາດຂອງອິດສະຣາເອນ.[5]ເພາະເຮົາໄດ້ກຳນົດມື້ໃຫ້ແກ່ເຈົ້າແລ້ວ
ມື້ຫນຶ່ງແທນປີຫນຶ່ງຂອງການລົງໂທດພວກມັນ: ຄືສາມຮ້ອຍເກົ້າສິບມື້! ໂດຍວິທີນີ້, ເຈົ້າຈະຕ້ອງແບກຄວາມຜິດບາບຂອງເຊື້ອສາຍ
ອິດສະຣາເອນ.
[6]ເມື່ອເຈົ້າເຮັດແບບນີ້ຈົນຄົບມື້ແລ້ວ, ແລ້ວເຈົ້າຈະຕ້ອງນອນລົງເປັນເທື່ອທີສອງ ແຕ່ນອນສະແຄງເບື້ອງຂວາ, ເພື່ອເຈົ້າຈະແບກ
ຄວາມຜິດບາຍຂອງເຊື້ອສາຍຂອງຢູດາ ສີ່ສິບມື້. ເຮົາໄດ້ກຳນົດໃຫ້ເຈົ້າຫນຶ່ງມື້ແທນຫນຶ່ງປີ.[7]ຈົ່ງຫັນຫນ້າຂອງເຈົ້າໄປຍັງນະຄອນເຢຣູຊາເລັມ
ທີ່ຖືກລ້ອມໄວ້, ແລະ ດ້ວຍອ້າແຂນອອກຂອງເຈົ້າ ເຈົ້າຈົ່ງທຳນວາຍຕໍ່ສູ້ນະຄອນນັ້ນ.[8]ແລະເບິ່ງແມ່! ເຮົາຈະເອົາເຄື່ອງຜູກມັດເຈົ້າໄວ້ ເພື່ອເຈົ້າ
ຈະບໍ່ພິກຈາກຂ້າງນີ້ໄປຫາຂ້າງນັ້ນ ຈົນກວ່າເຈົ້າຈະເຮັດຄົບຕາມກຳນົດມື້ຂອງເຈົ້າໃນການອ້ອມຂອງເຈົ້າ.
[9]ເຈົ້າຈົ່ງເອົາເຂົ້າສາລີ, ເຂົ້າບາເລ, ຫມາກຖົ່ວ, ຫມາກຖົ່ວແດງ, ເຂົ້າຟ່າງ ແລະ ເຂົ້າດຳ ມາສຳລັບຕົນ; ເອົາມາໃສ່ໃນໄຫຫນ່ວຍດຽວກັນ ແລະ
ໃຊ້ເຮັດເປັນເຂົ້າຈີ່ໃຫ້ສຳລັບຕົນຕາມຈຳນວນມື້ທີ່ເຈົ້ານອນສະແຄງນັ້ນ. ສຳລັບສາມຮ້ອຍເກົ້າສິບມື້ທີ່ເຈົ້າຈະກິນອາຫານນີ້.[10]ອາຫານທີ່ເຈົ້າຈະ
ກິນແມ່ນໃຫ້ກິນຕາມນ້ຳຫນັກ, ຊາວເຊເຂຕໍ່ມື້, ແລະ ເຈົ້າກິນຕາມເວລາກຳນົດໃນແຕ່ລະມື້.[11]ແລ້ວເຈົ້າຈະດື່ມນ້ຳ, ຕາມການຕວງຄືຫນຶ່ງສ່ວນ
ຫົກຂອງຈອກ, ແລ້ວເຈົ້າຈະດື່ມນ້ຳຕາມເວລາກຳນົດ.
[12]ເຈົ້າຈະຕ້ອງກິນເຂົ້າຫນົມເຂົ້າບາເລ, ແຕ່ເຈົ້າຕ້ອງອົບດ້ວຍເຊື້ອໄຟຈາກອາຈົມຂອງມະນຸດຕໍ່ສາຍຕາຂອງພວກເຂົາທັງຫລາຍ!"[13]ເພາະ
ພຣະຢາເວຊົງກ່າວວ່າ, "ສິ່ງນີ້ມີຄວາມຫມາຍວ່າ ເຂົ້າຈີ່ທີ່ປະຊາຊົນອິດສະຣາເອນຈະຕ້ອງກິນຈະເປັນມົນທິນຢ່າງນີ້, ໃນທ່າມກາງປະຊາຊາດ
ທີ່ເຮົາຈະຂັບໄລ່ພວກເຂົາໄປ"
[14]ແຕ່ຂ້ານ້ອຍໄດ້ກ່າວວ່າ, "ອະນິດຈັງ, ພຣະຢາເວ ອົງພຣະຜູ້ເປັນເຈົ້າ! ຂ້ານ້ອຍບໍ່ເຄີຍກິນອີ່ຫຍັງທີ່ໃຫ້ຕົນເອງເປັນມົນທິນເລີຍ ບໍ່ວ່າສັດທີ່
ຕາຍຊາກ ຫລື ສັດທີ່ຖືກຂ້າ, ຕັ້ງແຕ່ຂ້ານ້ອຍເປັນຫນຸ່ມຈົນນຮອດປັດຈຸບັນ, ແລະ ບໍ່ມີຊີ້ນສົກກະປົກອັນໃດເຂົ້າໄປໃນປາກຂອງ
ຂ້ານ້ອຍ!"[15]ດັ່ງນັ້ນ ພຣະອົງຈຶ່ງຊົງກ່າວກັບຂ້ານ້ອຍວ່າ, "ເບິ່ງແມ່! ເຮົາຈະຍອມໃຫ້ເຈົ້າໃຊ້ອາຈົມງົວແທນອາຈົມຂອງມະນຸດ, ຊຶ່ງເຈົ້າຈະໃຊ້
ຕຽມເຂົ້າຈີ່ຂອງເຈົ້າ"
[16]ພຣະອົງຊົງກ່າວກັບຂ້ານ້ອຍອີກວ່າ, "ບຸດແຫ່ງມະນຸດເອີຍ! ເບິ່ງແມ່! ເຮົາຈະທຳລາຍອາຫານຫລັກໃນນະຄອນເຢຣູຊາເລັມເສຍ, ແລະ ພວກ-
ເຂົາຈະກິນເຂົ້າຈີ່ທີ່ເປັນສ່ວນຂອງຄວາມກັງວົນ ແລະ ດື່ມນ້ຳທີ່ເປັນສ່ວນຂອງຄວາມຢ້ານກົວ.[17]ເພາະເມື່ອພວກເຂົາຂາດເຂົ້າຈີ່ ແລະ ນ້ຳ,
ທຸກຄົນກໍ່ຈະຕົກໃຈຢ້ານກົວ ຕໍ່ອ້າຍຂອງເຂົາເພາະໄດ້ຈ່ອຍຜອມໄປ ຍ້ອນຄວາມຜິດບາບຂອງພວກເຂົາ."

# 5

1ແລ້ວເຈົ້າ, “ບຸດແຫ່ງມະນຸດເອີຍ, ຈົ່ງເອົາມີດຄົມດວງຫນຶ່ງ ຈົ່ງເອົາມີດແຖຂອງຊ່າງຕັດຜົມ, ຈົ່ງແຖຜົມ ແລະ ຈົ່ງແຖຫນວດຂອງເຈົ້າ, ເອົາຊິງ
ມາຊັ່ງນ້ຳຫນັກ ແລະ ແຍກຜົມຂອງເຈົ້າອອກ. 2ຈົ່ງເຜົາຫນຶ່ງສ່ວນສາມດ້ວຍໄຟຢູ່ກາງເມືອງໃນມື້ທີ່ການລ້ອມຄົບຖ້ວນແລ້ວ, ແລະ ເອົາອີກ
ຫນຶ່ງສ່ວນສາມຂອງຜົມມາ ແລະ ເອົາມີດຟັນໃຫ້ທົ່ວເມືອງ. ແລ້ວອີກຫນຶ່ງສ່ວນສາມນັ້ນ ຈົ່ງໃຫ້ລົມພັດປິວກະຈາຍໄປ, ແລະ ເຮົາຈະຖອດ
ດາບໄລ່ຕາມປະຊາຊົນນັ້ນໄປ.

3ແຕ່ຈົ່ງເອົາເສັ້ນຜົມຈຳນວນຫນ້ອຍຫນຶ່ງນັ້ນມາ ແລະ ມັດຕິດໄວ້ເສື້ອຄຸມຂອງເຈົ້າ. 4ແລ້ວຈົ່ງເອົາຜົມເຫລົ່ານີ້ມາອີກ ແລະ ໂຍນເຂົ້າໄປໃນໄຟ;
ແລະ ເຜົາໃຫ້ມັນໄຫມ້ເສຍ; ຈາກບ່ອນນັ້ນ ໄຟຈະເຂົ້າໄປໃນເຊື້ອສາຍອິສຣາເອນທັງຫມົດ."
5ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ນີ້ຄືເຢຣູຊາເລັມ ໃນທ່າມກາງປະຊາຊາດທັງຫລາຍ, ເຮົາໄດ້ຕັ້ງພວກເຂົາໄວ້, ແລະ
ໃນບ່ອນທີ່ເຮົາໄດ້ລ້ອມຮອບໄວ້ໃນດ້ວຍດິນແດນອື່ນໆ. 6ແຕ່ນະຄອນນັ້ນໄດ້ປະຕິເສດພະບັນຍັດຂອງເຮົາຢ່າງຊົ່ວ-
ຮ້າຍຫລາຍກວ່າປະຊາຊາດທັງຫມົດທີ່ມີ, ແລະ ກະບົດຕໍ່ກົດບັນຍັດຂອງເຮົາຫລາຍກວ່າປະເທດທີ່ຢູ່ອ້ອມຮອບນະຄອນນັ້ນ. ປະຊາຊົນໄດ້ປະ-
ຕິເສດການຕັດສິນຂອງເຮົາ ແລະ ບໍ່ດຳເນີນຕາມກົດບັນຍັດຂອງເຮົາ."
7ເພາະສະນັ້ນ ພຣະຢາເວອົງຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, "ເພາະເຫດວ່າເຈົ້າມີບັນຫາຫລາຍກວ່າປະຊາຊາດທີ່ຢູ່ອ້ອມຮອບເຈົ້າ ແລະ ບໍ່ໄດ້ດຳ-
ເນີນຕາມກົດບັນຍັດ ຫລື ເຮັດຕາມກົດຫມາຍຂອງເຮົາ, ແຕ່ໄດ້ປະຕິບັດຕາມກົດຫມາຍຂອງບັນດາປະຊາຊາດທີ່ຢູ່ອ້ອມຮອບເຈົ້າ," 8ເພາະສະ-
ນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, "ເບິ່ງແມ໋! ເຮົາເອງຈະເປັນຜູ້ຕໍ່ສູ້ເຈົ້າ. ເຮົາຈະພິພາກສາລົງໂທດທ່າມກາງເຈົ້າຕໍ່ຫນ້າປະຊາ-
ຊາດທັງຫລາຍ.
9ເຮົາຈະເຮັດກັບເຈົ້າຢ່າງທີ່ເຮົາບໍ່ເຄີຍເຮັດມາກ່ອນ ແລະ ເຮົາຈະບໍ່ເຮັດແບບນັ້ນຕໍ່ໄປອີກ, ເພາະການກະທຳອັນຫນ້າລັງກຽດຂອງເຈົ້າ. 10ສະນັ້ນ
ພໍ່ຈະກິນລູກຊາຍຂອງຕົນທ່າມກາງເຈົ້າທັງຫລາຍ, ແລະ ບັນດາລູກຊາຍຈະກິນພໍ່ຂອງຕົນ, ເຮົາຈະພິພາກສາລົງໂທດເຈົ້າ ແລະ ເຮົາຈະໃຫ້ຜູ້
ທີ່ຍັງເຫລືອຢູ່ກະຈັດກະຈາຍໄປຕາມລົມທຸກທິດທາງ.
11ສະນັ້ນ, ເຮົາມີຊີວິດຢູ່ສັນໃດ — ນີ້ຄືພຣະຢາເວອົງຜູ້ເປັນເຈົ້າປະກາດວ່າ — ເປັນທີ່ແນ່ນອນແລ້ວວ່າ ເພາະເຈົ້າໄດ້ເຮັດໃຫ້ພຣະວິຫານຂອງ
ເຮົາເປັນມົນທິນດ້ວຍສິ່ງຫນ້າກຽດຊັງທັງຫມົດຂອງເຈົ້າ, ເຮົາຈະຕັດຈຳນວນຂອງເຈົ້າລົງ; ຄືສາຍຕາຂອງເຮົາຈະບໍ່ປາ-
ນີເຈົ້າ, ແລະ ເຮົາຈະບໍ່ສົງສານເຈົ້າອີກ. 12ຫນຶ່ງສ່ວນສາມຂອງພວກເຈົ້າຈະຕາຍດ້ວຍໂລກລະບາດ, ແລະ ພວກເຂົາຈະຖືກເຜົາໄຫມ້ດ້ວຍໄພ
ອຶດຫິວໃນທ່າມກາງຫມູ່ພວກເຈົ້າ. ອີກຫນຶ່ງສ່ວນສາມຈະລົ້ມຕາຍດ້ວຍຄົມດາບຢູ່ອ້ອມຮອບເຈົ້າ. ແລ້ວອີກຫນຶ່ງສ່ວນສາມ ເຮົາຈະເຮັດໃຫ້ກະ-
ຈັດກະຈາຍໄປທົ່ວທຸກທິດທຸກທາງ, ແລະ ຈະຖອດດາບອອກໄລ່ຕາມພວກເຂົາທັງຫລາຍໄປດ້ວຍ.
13ແລ້ວຄວາມໂກດຮ້າຍຂອງເຮົາກໍຈະມອດລົງ, ແລະ ເຮົາຈະລະບາຍຄວາມໂກດຮ້າຍຂອງເຮົາທີ່ມີຕໍ່ພວກເຂົາສະຫງົບລົງ. ເຮົາກໍຈະພໍໃຈ,
ແລະ ພວກເຂົາທັງຫລາຍຈະຮູ້ວ່າ, ເຮົາແມ່ນພຣະຢາເວ, ເປັນຜູ້ໄດ້ຊົງກ່າວດ້ວຍຄວາມໂກດຮ້າຍ ເມື່ອຄວາມຮ້າຍຂອງເຮົາຕໍ່ພວກເຂົາໄດ້
ຫມົດໄປ. 14ເຮົາຈະເຮັດໃຫ້ເຈົ້າຖືກເມີນເສີຍ ແລະ ຕຳຫນິໃນທ່າມກາງປະຊາຊາດທີ່ຢູ່ອ້ອມຮອບເຈົ້າ ດ້ວຍສາຍຕາຂອງບັນດາຜູ້ທີ່ຜ່ານໄປມາ.
15ດັ່ງນັ້ນ ເຢຣູຊາເລັມ ຈະກາຍເປັນສິ່ງຄົນທັງຫລາຍປະນາມ ແລະເຍາະເຍີ້ຍ, ທັງເປັນການຕັກເຕືອນແລະເປັນຄວາມກຽດຊັງຕໍ່ປະຊາຊາດທີ່ຢູ່
ອ້ອມຮອບເຈົ້າ. ເຮົາຈະພິພາກສາລົງໂທດເຈົ້າດ້ວຍຄວາມໂກດຮ້າຍ ແລະ ຢ່າງຮ້າຍກາດ, ແລະດ້ວຍການຕີສອນຢ່າງຮ້າຍກາດ — ເຮົາ,
ແມ່ນພຣະຢາເວໄດ້ປະກາດດັ່ງນີ້! 16ເຮົາຈະປ່ອຍລູກຫນ້າທະນູແຫ່ງໄພອຶດຫິວຕໍ່ສູ້ເຈົ້າທີ່ຈະກາຍເປັນວິທີຊຶ່ງເຮົາຈະທຳລາຍເຈົ້າ. ແລ້ວເຮົາເພີ່ມ
ການອຶດຫິວໃນເຈົ້າ ແລະ ທຳລາຍອາຫານຫລັກຂອງພວກເຈົ້າເສຍ. 17ເຮົາຈະສົ່ງໄພອຶດຫິວ ແລະ ໄພພິບັດຕ່າງໆ ມາຫາພວກເຈົ້າ ດັ່ງນັ້ນ
ເຈົ້າຈະບໍ່ມີລູກ. ໄພພິບັດ ແລະ ການຫລັ່ງເລືອດຈະຜ່ານໂຕເຈົ້າ ແລະ ເຮົາຈະນຳດາບມາຕໍ່ສູ້ເຈົ້າ — ເຮົາ, ແມ່ນພຣະຢາເວຜູ້ໄດ້ປະກາດດັ່ງນີ້
ແຫລະ.”


generated on Tue Jun 17 19:01:42 2025

6 [1]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]“ບຸດແຫ່ງມະນຸດເອີຍ, ຈົ່ງຕັ້ງຫນ້າຂອງເຈົ້າໄປທີ່ພູເຂົາທັງຫລາຍຂອງອິດສະຣາເອນ
และ ປະກາດພຣະທຳຕໍ່ພູເຂົາເຫລົ່ານັ້ນ.[3]ຈົ່ງກ່າວວ່າ, ພູເຂົາທັງຫລາຍຂອງອິດສະຣາເອນເອີຍ, ຈົ່ງຟັງພຣະທຳຂອງພຣະຢາເວອົງພຣະ-
ຜູ້ເປັນເຈົ້າ! ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວຢ່າງນີ້ຕໍ່ພູເຂົາທັງຫລາຍ, ຕໍ່ໂນນພູ, ຕໍ່ຫ້ວຍຮ່ອງ, ແລະ ຕໍ່ຮ່ວມພູທັງຫລາຍວ່າ: ເບິ່ງແມ໋!
ເຮົາຈະນຳດາບມາຕໍ່ສູ້ພວກເຈົ້າ, ແລະ ເຮົາຈະທຳລາຍສະຖານທີ່ສູງຂອງພວກເຈົ້າ.

[4]ແລ້ວແທ່ນບູຊາທັງຫລາຍຂອງເຈົ້າຈະຖືກມ້າງເພ ແລະ ເສົາທັງຫລາຍກໍຈະຖືກທັງຫລາຍ, ແລະ ເຮົາໂຍນສົບຄົນຕາຍຂອງພວກເຈົ້າລົງຕໍ່ຫນ້າ
ຮູບເຄົາລົບຂອງພວກເຈົ້າ.[5]ແລະເຮົາຈະວາງຊາກສົບຂອງຄົນອິດສະຣາເອນໄວ້ຕໍ່ຫນ້າຮູບເຄົາລົບຂອງພວກເຂົາ, ແລະ ເຮົາຈະກະຈາຍກະດູກ
ຂອງພວກເຈົ້າອ້ອມຮອບແທ່ນບູຊາຂອງພວກເຈົ້າ.
[6]ທຸກບ່ອນທີ່ພວກເຈົ້າອາໄສຢູ່, ເມືອງຕ່າງໆຈະຖືກມ້າງເພ ແລະ ສະຖານສູງຕ່າງໆຈະຖືກເສຍຫາຍ, ດັ່ງນັ້ນແຫລະ ແທ່ນບູຊາຂອງພວກເຈົ້າ
ຈະວາງເປົ່າ ແລະ ເປ່ເພ. ແລ້ວພວກມັນຈະແຕກຫັກ ແລ ຫາຍໄປ, ເສົາທັງຫລາຍຂອງເຈົ້າຈະຖືກຕັດລົງ ແລະ ການງານທັງຫລາຍຂອງເຈົ້າຈະ
ຖືກກວາດຖິ້ມ.[7]ຄວາມຕາຍຈະຕົກລົງມາທ່າມກາງພວກເຈົ້າ ແລະ ພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.
[8]ແຕ່ເຮົາຈະຮັກສາຄົນທີ່ເຫລືອທ່າມກາງພວກເຈົ້າໄວ້ຫນ້ອຍຫນຶ່ງ, ແລະ ຈະມີບາງຄົນລອດພົ້ນຈາກຄົມດາບໃນທ່າມກາງປະຊາຊາດທັງຫລາຍ,
ເມື່ອພວກເຈົ້າໄດ້ກະຈັດກະຈາຍໄປຢູ່ໃນປະເທດຕ່າງໆ.[9]ແລ້ວພວກຜູ້ທີ່ຫນີລອດໄດ້ນັ້ນ ກໍຈະລະນຶກເຖິງເຮົາ ໃນທ່າມກາງປະຊາຊາດທີ່ພວກເຂົາ
ຖືກກວາດໄປເປັນຊະເລີຍນັ້ນ, ເພາະເຮົາເສຍພຣະໄທເນື່ອງດ້ວຍໃຈບໍ່ສັດຊື່ຂອງພວກ-
ເຂົາທີ່ໄດ້ຫັນຫນີຈາກເຮົາ, ແລະ ເພາະດ້ວຍຕາຂອງພວກເຂົາທີ່ໂຫຍຫາຮູບເຄົາລົບຂອງພວກເຂົາ. ແລ້ວພວກເຂົາຈະກຽດຊັງຕົນເອງ ເນື່ອງ
ດ້ວຍຄວາມຊົ່ວທັງຫລາຍ ຄືໄດ້ເຮັດໃນສິ່ງຫນ້າລັງກຽດທັງຫລາຍຂອງພວກເຂົາ.[10]ແລ້ວພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ. ເຮົາ
ບໍ່ໄດ້ກ່າວສິ່ງເຫລົ່ານີ້ລ້າໆ, ເຮົາຈະນຳສິ່ງຊົ່ວຮ້າຍນີ້ຫາພວກເຂົາ.
[11]ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ຈົ່ງຕົບມື ແລະ ທຶບຕີນຂອງເຈົ້າ! ແລະກ່າວວ່າ, 'ອະນິດຈັງ! ເພາະບັນ-
ດາຄວາມຊົ່ວອັນຫນ້າກຽດຊັງຂອງເຊື້ອສາຍອິດສະຣາເອນ! ເຫດວ່າພວກເຂົາທັງຫລາຍຈະລົ້ມລົງດ້ວຍດາບ, ດ້ວຍຄວາມອຶດຫິວ, ແລະ ດ້ວຍ
ພະຍາດລະບາດ.[12]ຜູ້ທີ່ຢູ່ຫ່າງໄກຈະຕາຍດ້ວຍພະຍາດລະບາດ, ແລະ ຜູ້ທີ່ຢູ່ໃກ້ກໍຈະລົ້ມລົງດ້ວຍຄົມດາບ. ແລະຜູ້ທີ່ເຫລືອຢູ່ ແລະ ລອດຊີວິດ
ກໍຈະຕາຍດ້ວຍໄພອຶດຫິວ. ດັ່ງນັ້ນແຫລະ ເຮົາຈະລະບາຍຄວາມໂກດຮ້າຍຂອງເຮົາມີຢູ່ເທິງພວກເຂົາຈົນກວ່າຈະຫມົດໄປ.
[13]ແລ້ວພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ, ເມື່ອຊາກສົບຄົນຕາຍທັງຫລາຍໄດ້ນອນຢູ່ທ່າມກາງຮູບເຄົາລົບຂອງພວກເຂົາ, ອ້ອມແທ່ນບູຊາ
ຂອງພວກເຂົາ, ຢູ່ເທິງໂນນພູສູງທຸກບ່ອນ — ເທິງຍອດພູເຂົາທັງຫລາຍ, ແລະ ຢູ່ກ້ອງຕົ້ນໄມ້ທຸກຕົ້ນ ແລະ ກ້ອງຕົ້ນໂອກຂະຫນາດໃຫຍ່ທຸກຕົ້ນ
— ຄືສະຖານທີ່ຊຶ່ງພວກເຂົາເຜົາເຄື່ອງຫອມຖວາຍແກ່ຮູບເຄົາລົບທັງຫມົດຂອງຕົນ.[14]ເຮົາຈະເດ່ມືຂອງເຮົາອອກຕໍ່ສູ້ພວກເຂົາ ແລະ ເຮັດໃຫ້
ແຜ່ນດິນຮົກຮ້າງ ແລະ ຖິ້ມເປົ່າວ່າງ, ຄືຕັ້ງແຕ່ຖິ່ນແຫ້ງແລ້ງກັນດານເຖິງດິບລານ, ຕະຫລອດຈົນເຖິງທຸກບ່ອນທີ່ພວກເຂົາອາໄສຢູ່. ແລ້ວພວກ-
ເຂົາຈຶ່ງຈະຮູ້ວ່າ ເຮົາແມ່ນພຣະຢາເວ.”

 generated on Tue Jun 17 19:01:42 2025

7 1ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2“ບຸດແຫ່ງມະນຸດເອີຍ, ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວກັບແຜ່ນດິນ
ອິດສະຣາເອນດັ່ງນີ້ວ່າ.“ 'ອາວະສານ! ຄາວສິ້ນສຸດໄດ້ມາເຖິງທັງສີ່ດ້ານຂອງແຜ່ນດິນແລ້ວ.

3ບັດນີ້ ຄາວສິ້ນສຸດກຳລັງມາເຖິງເຈົ້າ, ເພາະເຮົາຈະສົ່ງຄວາມໂກດຮ້າຍຂອງເຮົາມາເຫນືອເຈົ້າທັງຫລາຍ, ແລະ ເຮົາຈະພິພາກສາເຈົ້າໃຫ້ສົມ
ກັບການປະພຶດຂອງເຈົ້າ; ແລະ ເຮົາຈະນຳເອົາຄວາມຫນ້າລັງກຽດທັງຫລາຍຂອງເຈົ້າມາເຫນືອເຈົ້າ. 4ເພາະດວງຕາຂອງເຮົາຈະບໍ່ປານີເຈົ້າ
ແລະ ເຮົາຈະບໍ່ສົງສານເຈົ້າ, ແຕ່ເຮົານຳການຊົ່ວຂອງເຈົ້າມາເຫນືອແທນ, ແລະ ສິ່ງຫນ້າກຽດຊັງທັງຫລາຍຂອງເຈົ້າຈະຢູ່ທ່າມກາງເຈົ້າ, ເພື່ອ
ເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.
5ພຣະຢາເວອົງພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ວ່າ: ໄພພິບັດ! ໄພພິບັດທີ່ບໍ່ເຫມືອນສິ່ງໃດ! ເບິ່ງແມ້, ໄພພິບັດກຳລັງມາເຖິງແລ້ວ. 6ແນ່ນອນ ຄາວ
ສຸດທ້າຍກຳລັງມາເຖິງແລ້ວ. ຄາວອາວະສານໄດ້ຕື່ນຂຶ້ນຕໍ່ສູ້ເຈົ້າແລ້ວ. ເບິ່ງແມ້, ມັນກຳລັງມາເຖິງແລ້ວ!
7ຄວາມຈິບຫາຍຂອງເຈົ້າກຳລັງມາເຖິງເຈົ້າ ຜູ້ທີ່ອາໄສຢູ່ໃນດິນແດນ. ເວລານັ້ນໄດ້ມາເຖິງແລ້ວ; ຄືມື້ແຫ່ງການທຳລາຍກໍໃກ້ເຂົ້າມາແລ້ວ, ແລະ
ພູເຂົາທັງຫລາຍ ກໍຈະປາສະຈາກຄວາມຊື່ນຊົມຍິນດີ.
8ບັດນີ້ ໃກ້ເວລາທີ່ເຮົາຈະລະບາຍຄວາມໂກດຮ້າຍຂອງເຮົາເຫນືອເຈົ້າ ແລະ ລະບາຍຄວາມຮ້າຍກາດຂອງເຮົາຕໍ່ເຈົ້າ ແລະເຮົາຈະພິພາກສາ
ເຈົ້າຕາມວິຖີຊີວິດຂອງເຈົ້າ ແລະ ເຮົາຈະນຳຄວາມຫນ້າກຽດຊັງທັງຫມົດຂອງເຈົ້າມາເຖິງເຈົ້າ. 9ເພາະດວງຕາຂອງເຮົາຈະບໍ່ຄວາມອີດູຕົນເຈົ້າ,
ແລະ ເຮົາຈະບໍ່ຍົດໂທດໃຫ້ເຈົ້າ. ຕາມທີ່ເຈົ້າໄດ້ເຮັດ, ເຮົາຈະເຮັດຕໍ່ເຈົ້າ; ແລະ ສິ່ງຫນ້າກຽດຊັງຂອງເຈົ້າກໍຈະຢູ່ທ່າມກາງເຈົ້າ ແລ້ວເຈົ້າຈະຮູ້ວ່າ
ເຮົາແມ່ນພຣະຢາເວ, ຜູ້ທີ່ກຳລັງລົງໂທດເຈົ້າ.
10ເບິ່ງແມ້, ວັນນັ້ນ! ເບິ່ງແມ້, ມັນກຳລັງມາເຖິງແລ້ວ! ຄວາມຈິບຫາຍໄດ້ອອກໄປແລ້ວ! ທ່ອນໄມ້ກໍເປັ່ງບານ, ແລ້ວຄວາມອວດອົ່ງກໍແຕກອອກ.
11ຄວາມຮຸນແຮງໄດ້ຈະເລີນຂຶ້ນເປັນທ່ອນໄມ້ຂອງຄວາມຊົ່ວຮ້າຍ — ຈະບໍ່ມີໃຜເຫລືອຢູ່ເລີຍ, ບໍ່ເຫລືອຜູ້ໃຜເລີຍ, ບໍ່ມີຝູງຊົນຂອງພວກເຂົາ,
ບໍ່ມີຊັບສົມບັດຂອງພວກເຂົາ, ບໍ່ມີຄວາມສຳຄັນໃດໆຈະຫມັ້ນຄົງ!
12ເວລານັ້ນມາເຖິງແລ້ວ; ວັນນັ້ນກໍໃກ້ເຂົ້າມາແລ້ວ. ຢ່າໃຫ້ຄົນຊື້ເກີດຄວາມຍິນດີ, ຫລືຄົນຂາຍເກີດຄວາມເສຍໃຈ ເພາະພຣະພິໂລດຂອງເຮົາຢູ່
ເຫນືອປະຊາຊົນທັງຫມົດ! 13ເພາະວ່າຜູ້ຂາຍຈະບໍ່ໄດ້ສິ່ງທີ່ຕົນໄດ້ຂາຍໄປກັບຄືນມາ, ເທົ່າທີ່ພວກເຂົາຍັງມີຊີວິດຢູ່, ເພາະວ່ານິມິດນັ້ນຈະຕໍ່ສູ້ປະ-
ຊາຊົນທັງຫມົດ. ພວກເຂົາຈະບໍ່ກັບຄືນມາ, ເພາະບໍ່ມີໃຜທີ່ມີຊີວິດໃນຄວາມບາບຂອງຕົນແຕ່ຍັງແຂງແຮງ!
14ພວກເຂົາໄດ້ເປົ່າແກແລ້ວ ແລະ ໄດ້ຕຽມທຸກຢ່າງໄວ້ພ້ອມແລ້ວ, ແຕ່ຍັງບໍ່ມີໃຜຍ່າງເຂົ້າສູ່ສົງຄາມ; ຍ້ອນວ່າພຣະພິໂລດຂອງເຮົາຢູ່ເຫນືອປະ-
ຊາຊົນທັງຫມົດ. 15ດາບກໍຢູ່ຂ້າງນອກ, ພະຍາດລະບາດ ແລະ ໄພອຶດຫິວກໍຢູ່ຂ້າງໃນອາຄານ. ຄົນທີ່ຢູ່ຕາມທົ່ງນາຈະຕາຍດ້ວຍຄົມດາບ,
ໃນຂະນະໄພອຶດຫິວ ແລະ ພະຍາດລະບາດກໍຈະກືນກິນຄົນເຫລົ່ານັ້ນທີ່ຢູ່ໃນເມືອງ. 16ແຕ່ຜູ້ລອດຊີວິດບາງຄົນຈະ
ຫນີອອກຈາກທ່າມກາງພວກເຂົາ, ແລະ ພວກເຂົາຈະໄປຢູ່ເທິງພູເຂົາ. ເຫມືອນກັບນົກກາງເກແຫ່ງຮ່ວມພູ, ພວກເຂົາທຸກຄົນຈະໂອ່ຍຄາງ —
ແຕ່ລະຄົນຈະໂອ່ຍຄາງເພາະຄວາມຜິດບາບຂອງຕົນ.
17ມືທຸກມືຈະອ່ອນແຮງລົງ ແລະ ທຸກຫົວເຂົ່າຈະອ່ອນເປັ້ຍຄືກັບນ້ຳ, 18ແລະ ພວກເຂົາຈະນຸ່ງເສື້ອຜ້າກະສອບປານ, ແລະ ຄວາມສັ່ນສະທ້ານຈະ
ປົກຄຸມພວກເຂົາໄວ້; ແລະ ຄວາມອັບອາຍຈະຢູ່ເທິງໃບຫນ້າຂອງພວກເຂົາທຸກຄົນ, ແລະ ຫົວຂອງເຂົາທຸກຄົນຈະລ້ານຫມົດ. 19ພວກເຂົາຈະໂຍນ
ເງິນຂອງພວກເຂົາໄປໃນຖະຫນົນ ແລະ ທອງຄຳຂອງພວກເຂົາກໍຈະເປັນເຫມືອນການປະຕິເສດ. ເງິນ ແລະ ຄຳຂອງພວກເຂົາກໍບໍ່ອາດຊ່ວຍ
ພວກເຂົາໃຫ້ພົ້ນໃນວັນແຫ່ງພຣະພິໂລດຂອງພຣະຢາເວໄດ້. ຊີວິດຂອງພວກເຂົາຈະບໍ່ພົ້ນ, ແລະ ຄວາມອຶດຢາກຈະບໍ່ໄດ້ຮັບການອີ່ມເຕັມ,
ເພາະວ່າຄວາມຜິດບາບຂອງພວກເຂົາ ໄດ້ເຮັດໃຫ້ສະດຸດ.
20ໃນຄວາມພາກພູມໃຈຂອງພວກເຂົາ ພວກເຂົາໄດ້ນຳເຄື່ອງປະດັບຂອງພວກເຂົາ, ແລະ ດ້ວຍສິ່ງເຫລົ່ານີ້ ພວກເຂົາໄດ້ເຮັດເປັນຮູບເຄົາລົບ
ແລະ ສິ່ງທີ່ຫນ້າກຽດຊັງຂອງພວກເຂົາ. ສະນັ້ນ ເຮົາຈະປ່ຽນສິ່ງເຫລົ່ານັ້ນໃຫ້ກາຍມາເປັນສິ່ງທີ່ເປັນມົນທິນຕໍ່ພວກເຂົາ.
21ແລ້ວເຮົາຈະເອົາສິ່ງເຫລົ່ານັ້ນໃຫ້ຄົນແປກຫນ້າຄືກັບການປຸ້ນ ແລະ ການຊົ່ວຮ້າຍໃນແຜ່ນດິນໂລກເຫມືອນກັບການປຸ້ນ ແລະ ພວກເຂົາທັງ-
ຫລາຍຈະເຮັດໃຫ້ເປັນມົນທິນ. 22ແລ້ວເຮົາຈະຫັນຫນ້າຂອງເຮົາອອກຈາກພວກເຂົາເສຍ ເມື່ອພວກເຂົາຈະເຮັດໃຫ້ສະຖານທີ່ລ້ຳຄ່າຂອງເຮົາ
ເປັນມົນທິນ; ພວກໂຈນຈະເຂົ້າ ແລະ ເຮັດໃຫ້ເປັນມົນທິນ.
23ຈົ່ງເຮັດສາຍໂສ້, ເພາະວ່າແຜ່ນດິນນັ້ນເຕັມໄປດ້ວຍການພິພາກສາເລືອດ, ແລະ ເມືອງກໍເຕັມໄປດ້ວຍຄວາມຮຸນແຮງ. 24ສະນັ້ນ ເຮົາຈະນຳປະ-
ຊາຊາດທີ່ຊົ່ວຮ້າຍທີ່ສຸດມາ, ແລະ ຖືກຳມະສິດເຮືອນທັງຫລາຍຂອງພວກເຂົາ, ແລະ ເຮົາຈະເຮັດໃຫ້ຄວາມຈອງຫອງຂອງຄົນຍິ່ງໃຫຍ່ສິ້ນສຸດ
ລົງ, ແລະ ສຳລັບສະຖານທີ່ສັກສິດຂອງພວກເຂົາຈະຖືກລົບລູ່. 25ຄວາມຢ້ານກົວຈະມາ! ພວກເຂົາຈະສະແຫວງຫາສັນຕິສຸກ, ແຕ່ຈະບໍ່ພົບເລີຍ.
26ໄພພິບັດເຫນືອໄພພິບັດມາເຖິງແລ້ວ, ແລະ ຈະມີຂ່າວລືຫລັງຈາກຂ່າວລືເກີດຂຶ້ນ. ແລ້ວພວກເຂົາຈະສະແຫວງຫານິມິດຈາກຜູ້ປະກາດພຣະ-
ທຳ, ແຕ່ການສອນພຣະບັນຍັດຈະພິນາດໄປຈາກປະໂລຫິດ ແລະ ຄຳແນະນຳຈາກພວກຜູ້ອາວຸໂສ. 27ກະສັດຈະໂສກເສົ້າ ແລະ
ເຈົ້າຊາຍຈະນຸ່ງຫົ່ມຢ່າງສິ້ນຫວັງ, ໃນຂະນະທີ່ມືຂອງປະຊາຊົນແຫ່ງແຜ່ນດິນຈະສັ່ນສະທ້ານຢ້ານກົວ. ເຮົາຈະເຮັດສິ່ງນີ້ແກ່ພວກເຂົາ
ຕາມວິຖີທາງຂອງພວກເຂົາ! ເຮົາຈະພິພາກສາພວກເຂົາຕາມມາດຕະຖານຂອງພວກເຂົາ ຈົນກວ່າພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ.”

8 1 ດັ່ງນັ້ນ ສິ່ງນີ້ໄດ້ເກີດຂຶ້ນໃນວັນທີຫ້າ ເດືອນທີຫົກ, ໃນປີທີຫົກ, ຄືໃນຂະນະທີ່ຂ້ານ້ອຍນັ່ງຢູ່ໃນເຮືອນຂອງຂ້ານ້ອຍ ແລະພວກຜູ້
ອາວຸໂສຂອງເຜົ່າຢູດານັ່ງຢູ່ຕໍ່ຫນ້າຂ້ານ້ອຍ, ພຣະຫັດຂອງພຣະຢາເວພຣະຜູ້ເປັນເຈົ້າໄດ້ລົງມາເທິງຂ້ານ້ອຍຢູ່ບ່ອນນັ້ນ. 2 ດັ່ງນັ້ນ, ຂ້ານ້ອຍກໍ
ແນມເບິ່ງ ແລະ ເບິ່ງແມ໋, ມີຮູບຮ່າງຫນຶ່ງຄ້າຍຄືຮູບຮ່າງມະນຸດ. ຈາກຮູບຮ່າງສ່ວນແອວລົງມາເບິ່ງຄືໄຟ. ແລະ ຈາກສ່ວນແອວຂຶ້ນເທິງເບິ່ງຄື
ບາງສິ່ງທີ່ແສງແຈ້ງສ່ອງໃສ, ຄືກັບໂລຫະທີ່ເຫລື້ອມໃສ.

3 ແລ້ວຜູ້ນັ້ນໄດ້ຢື່ນສ່ວນທີ່ຄ້າຍຄືກັບມືນັ້ນອອກມາ ແລະ ໄດ້ຈັບເອົາຜົມຈາກຫົວຂອງຂ້ານ້ອຍ; ແລະ ພຣະວິນຍານໄດ້ຊົງຍົກຂ້ານ້ອຍຂຶ້ນລະ-
ຫວ່າງໂລກ ແລະ ສະຫວັນ, ແລະ ໃນນິມິດຂອງພຣະເຈົ້ານັ້ນ, ພຣະອົງໄດ້ຊົງພາຂ້ານ້ອຍມາເຖິງນະຄອນເຢຣູຊາເລັມ, ມາເຖິງທາງເຂົ້າປະຕູ
ທາງທິດເຫນືອຂອງເດີ່ນຊັ້ນໃນ ຊຶ່ງເປັນບ່ອນຕັ້ງຮູບເຄົາລົບທີ່ກໍໃຫ້ເກີດຄວາມອິດສາຢ່າງຍິ່ງໃຫຍ່. 4 ແລ້ວ ເບິ່ງແມ໋, ພຣະສະຫງ່າຣາສີຂອງພຣະ-
ເຈົ້າແຫ່ງອິດສະຣາເອນກໍຢູ່ບ່ອນນັ້ນ, ເຫມືອນກັບນິມິດທີ່ຂ້ານ້ອຍໄດ້ເຫັນຢູ່ທົ່ງພຽງນັ້ນ
5 ແລ້ວພຣະອົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ບັດນີ້ ຈົ່ງເງີຍຫນ້າຂຶ້ນເບິ່ງໄປທາງທິດເຫນືອ.” ດັ່ງນັ້ນ ຂ້ານ້ອຍ ກໍໄດ້ເງີຍຫນ້າ
ຂຶ້ນເບິ່ງໄປທາງທິດເຫນືອ, ແລະ ປະຕູເຂົ້າທາງທິດເຫນືອນໍາໄປເຖິງແທ່ນບູຊາ, ຢູ່ບ່ອນນັ້ນມີທາງເຂົ້າ, ມີຮູບເຄົາລົບແຫ່ງການອິດສາ.
6 ແລ້ວພຣະອົງກ່າວກັບຂ້ານ້ອຍອີກວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າກໍາລັງເຫັນສິ່ງທີ່ພວກເຂົາກໍາລັງເຮັດບໍ? ຄືສິ່ງທີ່ຫນ້າກຽດຊັງອັນຍິ່ງ-
ໃຫຍ່ເຫລົ່ານີ້ ຊຶ່ງເຊື້ອສາຍຂອງອິດສະຣາເອນກໍາລັງເຮັດຢູ່ນີ້ເຮັດໃຫ້ເຮົາໄປໄກຈາກສະຖານທີ່ສັກສິດຂອງເຮົາ. ແຕ່ເຈົ້າຈະເຫັນສິ່ງທີ່ຫນ້າ
ກຽດຊັງຍິ່ງໃຫຍ່ຫລາຍກວ່ານີ້ອີກ.”
7 ແລ້ວພຣະອົງໄດ້ຊົງນໍາຂ້ານ້ອຍມາເຖິງປະຕູທາງເຂົ້າເດີ່ນ, ແລະ ຂ້ານ້ອຍແນມເບິ່ງ, ແລະ ກໍເຫັນວ່າມີປ່ອງຫນຶ່ງຢູ່ໃນກໍາແພງ. 8 ພຣະອົງກ່າວກັບ
ຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ຈົ່ງເຈາະເຂົ້າໄປໃນກໍາແພງນີ້.” ເມື່ອຂ້ານ້ອຍເຈາະເຂົ້າໄປໃນກໍາແພງແລ້ວ, ແລະ ມີປະຕູຢູ່ບານຫນຶ່ງ.
9 ແລ້ວພຣະອົງຊົງກ່າວກັບຂ້ານ້ອຍວ່າ, “ຈົ່ງເຂົ້າໄປເຖີດ ແລະ ເບິ່ງສິ່ງທີ່ຫນ້າກຽດຊັງຢ່າງຊົ່ວຮ້າຍທີ່ພວກເຂົາກໍາລັງເຮັດໃນບ່ອນນີ້.”
10 ດັ່ງນັ້ນ ຂ້ານ້ອຍຈຶ່ງເຂົ້າໄປ ແລະ ເບິ່ງແມ໋! ມີຮູບຮ່າງສັດເລືອຄານທຸກຊະນິດ ແລະ ສັດທີ່ຫນ້າລັງກຽດ! ຮູບເຄົາລົບຂອງເຊື້ອສາຍ
ອິດສະຣາເອນທີ່ແກະສະລັກໄວ້ເທິງຝາກໍາແພງອ້ອມຮອບ. 11 ຜູ້ອາວຸໂສຂອງເຊື້ອສາຍອິດສະຣາເອນທັງເຈັດສິບຄົນກໍຢູ່ບ່ອນນັ້ນ, ແລະ ຢາອາ-
ຊານີຢາລູກຊາຍຂອງຊາຟານຢືນຢູ່ທ່າມກາງຂອງພວກເຂົາ. ພວກເຂົາຢືນຢູ່ຕໍ່ຫນ້າຮູບເຫລົ່ານັ້ນ ແລະ ຜູ້ຊາຍແຕ່ລະຄົນກໍມີກະຖາງໄຟຢູ່ໃນ
ມືຂອງພວກເຂົາ ເພື່ອວ່າກິ່ນຄວັນຂອງເຄື່ອງເຜົາບູຊາຈະໄດ້ລອຍຂຶ້ນໄປຂ້າງເທິງ.
12 ແລ້ວພຣະອົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ ເຈົ້າໄດ້ເຫັນແລ້ວບໍ່ວ່າ ພວກອາວຸໂສຂອງເຊື້ອສາຍອິດສະຣາເອນເຮັດຫຍັງຢູ່ໃນ
ຄວາມມືດ? ແຕ່ລະຄົນລີ້ເຮັດສິ່ງນີ້ຢູ່ໃນຫ້ອງຕັ້ງຮູບເຄົາລົບຂອງຕົນ, ເພາະພວກເຂົາເວົ້າວ່າ, ‘ພຣະຢາເວບໍ່ຊົງທອດພຣະເນດເຫັນເຮົາ!
ພຣະຢາເວໄດ້ປະຖິ້ມແຜ່ນດິນນີ້ເສຍແລ້ວ.’” 13 ແລ້ວພຣະອົງໄດ້ກ່າວກັບຂ້ານ້ອຍດ້ວຍວ່າ, “ ຈົ່ງຫັນມາອີກຄັ້ງ, ແລະ ເຈົ້າຈະເຫັນ
ພວກເຂົາກໍາລັງເຮັດສິ່ງທີ່ຫນ້າກຽວຊັງຍິ່ງກວ່ານີ້ອີກ.”
14 ຕໍ່ໄປ ພຣະອົງໄດ້ຊົງນໍາຂ້ານ້ອຍມາເຖິງທາງເຂົ້າປະຕູພຣະວິຫານຂອງພຣະຢາເວທີ່ຢູ່ທາງທິດເຫນືອ, ແລະ ເບິ່ງແມ໋! ພວກຜູ້ຍິງທັງຫລາຍ
ກໍາລັງນັ່ງຈົ່ມຕໍ່ພະຕາມມຸດ. 15 ດັ່ງນັ້ນ ພຣະອົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນສິ່ງນີ້ບໍ? ຈົ່ງຫັນກັບມາອີກຄັ້ງ, ເຈົ້າຈະເຫັນ
ສິ່ງທີ່ຫນ້າລັງກຽດຍິ່ງກວ່າສິ່ງເຫລົ່ານີ້ອີກ.”
16 ພຣະອົງໄດ້ຊົງນໍາຂ້ານ້ອຍເຂົ້າມາໃນເດີ່ນຊັ້ນໃນແຫ່ງພຣະວິຫານຂອງພຣະຢາເວ, ເບິ່ງແມ໋! ຢູ່ປະຕູທາງເຂົ້າພຣະວິຫານຂອງພຣະຢາເວ ລະ-
ຫວ່າງ ລະບຽງ ແລະ ແທ່ນບູຊາ, ມີຊາຍປະມານຊາວຫ້າຄົນຫັນຫລັງໃຫ້ພຣະວິຫານແຫ່ງພຣະຢາເວ ແຕ່ປິ່ນຫນ້າຂອງພວກເຂົາໄປທາງທິດ-
ຕາເວັນອອກ, ແລະ ພວກເຂົາກໍາລັງນະມັດສະການດວງອາທິດ.
17 ພຣະອົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນສິ່ງນີ້ບໍ? ມັນເປັນສິ່ງທີ່ເລັກນ້ອຍບໍ ທີ່ເຊື້ອສາຍຢູດາເຮັດການອັນຫນ້າກຽດຊັງ
ຊຶ່ງພວກເຂົາເຮັດຢູ່ບ່ອນນີ້? ພວກເຂົາເຮັດໃຫ້ແຜ່ນດິນເຕັມໄປດ້ວຍຄວາມຮຸນແຮງ ແລະ ເຮັດໃຫ້ເຮົາຫັນມາໂກດຮ້າຍຫລາຍຂຶ້ນ, ເອົາງ່າໄມ້
ມາແຍ່ດັງຂອງຕົນ. 18 ເພາະສະນັ້ນ ເຮົາຈະຈັດການກັບພວກເຂົາ; ດວງຕາຂອງເຮົາຈະບໍ່ອີດູຕົນ, ແລະ ເຮົາຈະບໍ່ຍົກໂທດໃຫ້ພວກເຂົາ. ເຖິງ-
ແມ່ນວ່າພວກເຂົາຈະຮ້ອງໃສ່ຫູຂອງເຮົາດ້ວຍສຽງດັງກໍຕາມ, ເຮົາກໍຈະບໍ່ຟັງພວກເຂົາ.”

 generated on Tue Jun 17 19:01:42 2025

9 [1]ແລ້ວຂ້ານ້ອຍໄດ້ຍິນພຣະອົງໄດ້ເປັ່ງພຣະສຸລະສຽງດັງເຂົ້າຫູຂ້ານ້ອຍ, ແລະ ຊົງກ່າວວ່າ, “ຈົ່ງນຳພວກຄົນຍາມຂຶ້ນມາເມືອງນີ້,
ແຕ່ລະຄົນຖືອາວຸດຂອງການທຳລາຍມານຳ.[2]ເບິ່ງແມ໋! ມີຊາຍຫົກຄົນເຂົ້າມາຈາກທາງປະຕູເບື້ອງເທິງ ປິ່ນຫນ້າໄປທາງທິດເຫນືອ, ແຕ່ລະຄົນ
ຖືອາວຸດສຳລັບຂ້າຄົນໃນມືຂອງພວກເຂົາ. ມີຊາຍຄົນຫນຶ່ງໃນທ່າມກາງພວກເຂົານຸ່ງຫົ່ມຜ້າປ່ານ ຖືຫີບເຄື່ອງຂຽນມາກັບຄົນເຫລົ່ານັ້ນດ້ວຍ.
ດັ່ງນັ້ນ ພວກເຂົາທັງຫລາຍເຂົ້າໄປ ແລະ ຢືນຢູ່ຂ້າງແທ່ນບູຊາທອງເຫລືອງ.

[3]ແລ້ວພຣະສະຫງ່າຣາສີຂອງພຣະເຈົ້າແຫ່ງອິດສະຣາເອນກໍໄດ້ເຄື່ອນຂຶ້ນຈາກເຫລົ່າເຄຣຸບທີ່ເຄີຍສະຖິດໄປຍັງປະຕູພຣະວິຫານ. ພຣະອົງກ່າວ
ຕໍ່ຊາຍຜູ້ທີ່ນຸ່ງຫົ່ມຜ້າປ່ານ ຜູ້ທີ່ຖືຫີບເຄື່ອງຂຽນຢູ່ຂ້າງເຂົານັ້ນ.[4]ພຣະ-
ຢາເວຊົງກ່າວກັບເຂົາວ່າ, “ຈົ່ງຜ່ານທ່າມກາງເມືອງ—ຈົ່ງໄປກາງນະຄອນເຢຣູຊາເລມ—ແລະ ເຮັດເຄື່ອງຫມາຍໄວ້ທີ່ຫນ້າຜາກຂອງປະຊາຊົນ
ຜູ້ທີ່ໂສກເສົ້າ ແລະ ຄໍາຄວນ ຍ້ອນສິ່ງຫນ້າກຽດຊັງທັງຫມົດທີ່ຄົນທັງຫລາຍໄດ້ເຮັດກັນໃນທ່າມກາງເມືອງນີ້."
[5]ແລ້ວຂ້ອຍນ້ອຍກໍໄດ້ຍິນພຣະອົງຊົງກ່າວກັບຄົນອື່ນໆວ່າ, “ຈົ່ງຜ່ານເມືອງຕາມຊາຍຄົນນັ້ນໄປ ແລະ ຂ້າທຸກຄົນເສຍ. ຢ່າໃຫ້ດວງຕາຂອງເຈົ້າ
ໄດ້ມີຄວາມປານີ ແລະ ຢ່າໄດ້ສົງສານເລີຍ.[6]ເຖິງວ່າຈະເປັນຄົນເຖົ້າ, ຄົນຫນຸ່ມ, ຄົນສາວ, ທັງເດັກນ້ອຍໆ ແລະພວກຜູ້ຍິງ.
ຈົ່ງຂ້າພວກເຂົາໃຫ້ຫມົດ! ແຕ່ຢ່າເຂົ້າໃກ້ຜູ້ທີ່ມີເຄື່ອງຫມາຍໃນຫນ້າຜາກຂອງເຂົາ. ຈົ່ງເລີ່ມຈາກສະຖານທີ່ສັກສິດຂອງເຮົານີ້ເລີຍ!” ດັ່ງນັ້ນ
ພວກເຂົາຈຶ່ງເລີ່ມຂ້າຄົນເຖົ້າ ຄືຜູ້ທີ່ຢູ່ຕໍ່ຫນ້າພຣະວິຫານນັ້ນ.
[7]ພຣະອົງກ່າວກັບພວກເຂົາວ່າ, “ຈົ່ງເຮັດໃຫ້ພຣະວິຫານເປັນມົນທິນ, ແລະ ຈົ່ງເຮັດໃຫ້ເດີ່ນພຣະວິຫານເຕັມໄປດ້ວຍຄົນຕາຍ.ຈົ່ງໄປສາ!”
ດັ່ງນັ້ນ ພວກເຂົາທັງຫລາຍຈຶ່ງອອກໄປ ແລະ ໂຈມຕີຄົນທົ່ວເມືອງ.[8]ໃນຂະນະທີ່ພວກເຂົາກຳລັງໂຈມຕີຢູ່ນັ້ນ, ຂ້ານ້ອຍກໍຢູ່ຄົນດຽວ ແລະ ຂ້ານ້ອຍ
ກໍກົ້ມຫນ້າລົງເຖິງດິນ ແລະ ຮ້ອງທູນຂໍວ່າ, “ອະນິດຈັງ! ພຣະຢາເວ ພຣະຜູ້ເປັນເຈົ້າ, ພຣະອົງຈະຊົງໄດ້ທຳລາຍຄົນອິດສະຣາເອນທີ່ເຫລືອຢູ່ນັ້ນ
ທັງຫມົດດ້ວຍພຣະພິໂລດທີ່ຊົງລະບາຍເຫນືອນະຄອນເຢຣູຊາເລມນັ້ນບໍ?”
[9]ພຣະອົງຊົງກ່າວກັບຂ້ານ້ອຍວ່າ, “ຄວາມຊົ່ວຮ້າຍຂອງເຊື້ອສາຍອິດສະຣາເອນ ແລະ ຢູດາ ໃຫຍ່ຫລວງຫລາຍ. ແຜ່ນດິນກໍເຕັມໄປດ້ວຍເລືອດ
ແລະ ຄວາມເສື່ອມຊາມກໍເຕັມເມືອງ, ເພາະພວກເຂົາກ່າວວ່າ, ‘ພຣະຢາເວໄດ້ຊົງຫລົງລືມແຜ່ນດິນນີ້ແລ້ວ; ແລະ ’ພຣະຢາເວບໍ່ທອດພຣະ-
ເນດເຫັນດອກ’.[10]ດັ່ງນັ້ນ ຕາຂອງເຮົາບໍ່ມີຄວາມປານີ, ແລະ ເຮົາຈະບໍ່ໃຫ້ອະໄພພວກເຂົາ. ແຕ່ເຮົາຈະໃຫ້ສິ່ງທີ່ພວກເຂົາໄດ້ເຮັດໄວ້ນັ້ນ
ກັບມາຕົກໃສ່ຫົວຂອງພວກເຂົາແທນ”.[11]ເບິ່ງແມ໋! ຊາຍຄົນທີ່ນຸ່ງຫົ່ມຜ້າປ່ານຖືຫີບເຄື່ອງຂຽນຢູ່ທາງຂ້າງຂອງເຂົານັ້ນກໍກັບມາ. ເຂົາໄດ້ລາຍງານ
ແລະ ເວົ້າວ່າ, “ຂ້ານ້ອຍໄດ້ເຮັດຕາມທີ່ພຣະອົງໄດ້ຊົງສັ່ງຈົນແລ້ວ.”


generated on Tue Jun 17 19:01:42 2025

10 [1]ຂະນະທີ່ຂ້ານ້ອຍເບິ່ງໂດມ ຊຶ່ງຢູ່ເທິງຫົວຂອງເຫລົ່າເຄຣຸບ; ມີບາງສິ່ງປະກົດຂຶ້ນເຫນືອພວກເຂົາເຫມືອນແກ້ວມໍລະກົດ ແລະ ມີຮູບຮ່າງ
ຄ້າຍຄືພຣະທີ່ນັ່ງ.[2]ແລ້ວ ພຣະຢາເວ ກ່າວຕໍ່ຊາຍຜູ້ທີ່ນຸ່ງຜ້າປ່ານ ແລະ ເວົ້າວ່າ, “ຈົ່ງເຂົ້າໄປໃນທ່າມກາງວົງລໍ້ ຊຶ່ງຢູ່ພາຍໃຕ້ເຫລົ່າເຄ-
ຣຸບນັ້ນ, ແລະ ຈົ່ງຫອບເອົາຖ່ານໄຟດ້ວຍມືທັງສອງຂອງເຈົ້າຈົນເຕັມ ຊຶ່ງຢູ່ທ່າມກາງເຫລົ່າເຄຣຸບ ແລະໂຮ່ຍມັນອອກໄປທົ່ວເມືອງ.” ແລ້ວຜູ້ຊາຍ
ຄົນນັ້ນກໍເຂົ້າໄປ ຂະນະທີ່ຂ້ານ້ອຍເຝົ້າເບິ່ງຢູ່.

[3]ຝ່າຍເຫລົ່າເຄຣຸບຢືນຢູ່ດ້ານຂວາຂອງພຣະວິຫານ ເວລາທີ່ຊາຍຄົນນັ້ນເຂົ້າໄປຂ້າງໃນ, ແລະ ເມກໄດ້ປົກຄຸມຢູ່ທົ່ວເດີ່ນຊັ້ນໃນ.[4]ພຣະ-
ສະຫງ່າຣາສີຂອງພຣະຢາເວໄດ້ປະກົດຂຶ້ນຈາກເຫລົ່າເຄຣຸບ ແລະ ໄດ້ຢືນຢູ່ເຫນືອປະຕູພຣະວິຫານ. ຖືກປົກຄຸມດ້ວຍເມກເຕັມພຣະວິຫານ,
ແລະ ເດີ່ນນັ້ນກໍເຕັມໄປດ້ວຍແສງສະຫວ່າງຂອງພຣະສະຫງ່າຣາສີຂອງພຣະຢາເວ.[5]ສຽງປີກທັງຫລາຍຂອງເຫລົ່າເຄຣຸບກໍໄດ້ຍິນໄປເຖິງເດີ່ນ
ຊັ້ນນອກ, ເຫມືອນພຣະສຸລະສຽງຂອງພຣະເຈົ້າຜູ້ຊົງລິດທານຸພາບເມື່ອພຣະອົງຊົງກ່າວ.
[6]ສິ່ງນີ້ໄດ້ເກີດຂຶ້ນ, ເມື່ອພຣະອົງຊົງມີພຣະບັນຊາໃຫ້ຊາຍທີ່ນຸ່ງຫົ່ມຜ້າປ່ານວ່າ, “ຈົ່ງໄປເອົາໄຟຈາກທ່າມກາງກົງລໍ້ທີ່ຢູ່ລະຫວ່າງ ເຫລົ່າເຄ-
ຣຸບອອກມາ,” ຊາຍຄົນນັ້ນກໍເຂົ້າໄປ ແລະ ຢືນຢູ່ທາງຂ້າງກົງລໍ້ວົງຫນຶ່ງ.[7]ເຄຣຸບຕົນຫນຶ່ງໄດ້ຍື່ນມືຂອງມັນອອກໄປ ລະຫວ່າງ ເຫລົ່າເຄຣຸບໄປຫາ
ໄຟນັ້ນ ທີ່ຢູ່ລະຫວ່າງ ເຄຣຸບ, ແລະ ມັນໄດ້ ຈັບໄຟຂຶ້ນມາສ່ວນຫນຶ່ງ ແລະ ໄດ້ວາງໃສ່ມືຂອງຊາຍທີ່ນຸ່ງຫົ່ມຜ້າປ່ານ. ຊາຍນັ້ນກໍໄດ້ຮັບເອົາໄວ້
ແລະ ກັບມາ.[8]ຂ້ານ້ອຍໄດ້ເຫັນເຫລົ່າເຄຣຸບຄ້າຍມືມະນຸດຢູ່ກ້ອງປີກທັງຫລາຍຂອງພວກມັນ.
[9]ດັ່ງນັ້ນ ຂ້ານ້ອຍໄດ້ເຫັນ, ແລະ ເບິ່ງແມ! ກົງລໍ້ສີ່ວົງຢູ່ຂ້າງເຫລົ່າເຄຣຸບ—ກົງລໍ້ແຕ່ລະອັນຢູ່ທາງຂ້າງເຄຣຸບແຕ່ລະໂຕ— ແລະ
ຮູບຮ່າງຂອງບັນດາກົງລໍ້ນັ້ນເຫມືອນກັບຫີນເບຣິກ.[10]ຮູບຮ່າງຂອງພວກມັນເບິ່ງເຫມືອນກັບກົງລໍ້ທັງສີ່, ເຫມືອນກັບກົງລໍ້ທີ່ຊ້ອນໃນກົງ
ລໍ້ອີກອັນຫນຶ່ງ.[11]ເມື່ອພວກມັນເຄື່ອນໄປ, ພວກມັນກໍໄປທາງໃດທາງຫນຶ່ງໃນສີ່ທາງ ໂດຍບໍ່ໄດ້ຫັນໄປຕາມທາງທີ່ຈະໄປ. ແຕ່ວ່າ,
ເມື່ອໃດກໍຕາມທີ່ຫົວນັ້ນໄດ້ມຸ້ງຫນ້າໄປ, ພວກມັນກໍໄດ້ຕາມໄປ. ໃນຂະນະທີ່ພວກມັນໄປ ພວກມັນກໍບໍ່ໄດ້ຫລຽວໄປໃນທິດທາງໃດເລີຍ.
[12]ທົ່ວຮ່າງກາຍຂອງພວກມັນ — ລວມເຖິງທາງຫລັງຂອງພວກມັນ, ມືຂອງພວກມັນ, ແລະ ປີກຂອງພວກມັນ — ເຕັມໄປດ້ວຍດວງຕາ, ແລະ
ດວງຕາທັງຫລາຍ ກໍໄດ້ປົກຄຸມກົງລໍ້ທັງສີ່ເຕັມໄປຫມົດ.[13]ຂະນະທີ່ຂ້ານ້ອຍຟັງ, ກົງລໍ້ຖືກເອີ້ນ, “ຫມູນ.”[14]ພວກມັນແຕ່ລະໂຕມີສີ່ຫນ້າ;
ຫນ້າທີ່ຫນຶ່ງເປັນຫນ້າເຄຣຸບ, ຫນ້າທີ່ສອງເປັນຫນ້າມະນຸດ, ຫນ້າທີ່ສາມເປັນຫນ້າສິງໂຕ, ແລະ ທີ່ສີ່ເປັນຫນ້ານົກອິນຊີ.
[15]ແລ້ວເຫລົ່າເຄຣຸບ — ແມ່ນສິ່ງທີ່ມີຊີວິດ ຊຶ່ງຂ້ານ້ອຍເຄີຍເຫັນຢູ່ແຄມແມ່ນ້ຳເກບາ — ລຸກຂຶ້ນ.[16]ເມື່ອໃດກໍຕາມທີ່ເຫລົ່າເຄຣຸບເຄື່ອນໄຫວ,
ເຫລົ່າກົງລໍ້ທີ່ຢູ່ທາງຂ້າງພວກມັນກໍໄດ້ເຄື່ອນໄປດ້ວຍ, ແລະ ເມື່ອໃດກໍຕາມທີ່ເຫລົ່າເຄຣຸບກາງປີກທັງຫລາຍອອກເພື່ອຈະບິນຂຶ້ນຈາກໂລກ, ກົງລໍ້
ເຫລົ່ານັ້ນກໍບໍ່ຫັນ. ພວກມັນຈະຢືນຢູ່ທາງຂ້າງເຄຣຸບ.[17]ເມື່ອເຫລົ່າເຄຣຸບຢືນຢູ່, ບັນດາກົງລໍ້ກໍຢືນຢູ່, ແລະ ເມື່ອເຫລົ່າເຄຣຸບເຫາະຂຶ້ນ, ກົງລໍ້
ທັງຫລາຍກໍເຫາະຂຶ້ນກັບພວກມັນໄປດ້ວຍ, ເພາະວ່າວິນຍານຂອງສິ່ງທີ່ມີຊີວິດໄດ້ຢູ່ໃນບັນດາກົງລໍ້ນັ້ນ.
[18]ແລ້ວພຣະສາະຫງ່າຣາສີຂອງພຣະຢາເວໄປຈາກເຫນືອປະຕູພຣະວິຫານ ແລະ ຢືນເຫນືອເຫລົ່າເຄຣຸບ.[19]ເມື່ອເຫລົ່າເຄຣຸບໄດ້ກາງ
ປີກທັງຫລາຍຂອງພວກມັນອອກ ແລະ ບິນຂຶ້ນໄປຈາກໂລກໃນສາຍຕາຂອງຂ້ານ້ອຍ, ເມື່ອພວກມັນໄດ້ເຄື່ອນອອກໄປ, ແລະ ກົງລໍ້ກໍ
ເຮັດຢ່າງດຽວກັນຢູ່ຂ້າງພວກມັນ. ພວກມັນໄດ້ຢືນຢູ່ທາງເຂົ້າປະຕູທາງທິດຕາເວັນອອກຂອງພຣະວິຫານແຫ່ງພຣະຢາເວ, ແລະ
ພຣະສະຫງ່າຣາສີຂອງພຣະເຈົ້າແຫ່ງອິດສະຣາເອນມາຢູ່ເຫນືອພວກມັນ.
[20]ເຫລົ່ານີ້ແມ່ນສິ່ງທີ່ມີຊີວິດ ຊຶ່ງຂ້ານ້ອຍໄດ້ເຫັນພາຍໃຕ້ພຣະເຈົ້າແຫ່ງອິດສະຣາເອນຢູ່ແຄມແມ່ນ້ຳເກບາກ, ດັ່ງນັ້ນ ຂ້ານ້ອຍຮູ້ວ່າ ພວກມັນຄື
ເຫລົ່າເຄຣຸບ![21]ພວກມັນແຕ່ລະໂຕມີສີ່ຫນ້າ ແລະ ສີ່ປີກ, ແລະ ຮູບຮ່າງເຫມືອນມືມະນຸດພາຍໃຕ້ປີກທັງຫລາຍຂອງມັນ,[22]ແລະ
ລັກສະນະໃບຫນ້າຂອງພວກມັນເຫມືອນໃບຫນ້າທັງຫລາຍທີ່ຂ້ານ້ອຍເຄີຍເຫັນຢູ່ແຄມແມ່ນ້ຳເກບາກ, ແລະ ເຄຣຸບແຕ່ລະໂຕໄດ້ມຸ້ງໄປ
ຂ້າງຫນ້າ.

 generated on Tue Jun 17 19:01:42 2025

11 1ແລ້ວພຣະວິນຍານໄດ້ຍົກຂ້ານ້ອຍຂຶ້ນ ແລະ ນຳຂ້ານ້ອຍມາທີ່ປະຕູທາງທິດຕາເວັນອອກຂອງພຣະວິຫານແຫ່ງພຣະຢາເວ, ຊຶ່ງຫລຽວ
ຫນ້າໄປທິດຕາເວັນອອກ, ແລະ ເບິ່ງແມ, ຢູ່ທາງເຂົ້າປະຕູມີຜູ້ຊາຍຊາວຫ້າຄົນ. ຂ້ານ້ອຍເຫັນຢາອາຊານີຢາລູກຊາຍຂອງອັດຊູຣະ ແລະ
ເປລາຕີຢາ ລູກຊາຍຂອງເບນາອີຢາ, ຜູ້ນຳຂອງປະຊາຊົນໃນທ່າມກາງພວກເຂົາ.

2ພຣະເຈົ້າຊົງກ່າວກັບຂ້ານ້ອຍວ່າ, "ບຸດແຫ່ງມະນຸດເອີຍ, ຊາຍພວກນີ້ເປັນພວກທີ່ແນະນຳການຊົ່ວຮ້າຍ, ແລະ ຕັດສິນແຜນຊົ່ວໃນເມືອງນີ້.
3ພວກເຂົາເວົ້າວ່າ, 'ເວລາທີ່ຈະສ້າງບ້ານຍັງບໍ່ແມ່ນຕອນນີ້; ເມືອງນີ້ເປັນເຫມືອນຫມໍ້, ແລະ ພວກເຮົາເປັນເຫມືອນຊີ້ນ.'4ສະນັ້ນ, ຈົ່ງທຳນວາຍ
ຕໍ່ສູ້ພວກເຂົາເຖີດ. ບຸດແຫ່ງມະນຸດເອີຍ, ຈົ່ງທຳນວາຍ."
5ແລ້ວ ພຣະວິນຍານຂອງພຣະຢາເວ ລົງມາເຫນືອຂ້ານ້ອຍ ແລະ ພຣະອົງຊົງກ່າວກັບຂ້ານ້ອຍວ່າ, "ກ່າວວ່າ: ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວ
ວ່າ: ໃນຂະນະທີ່ເຈົ້າກຳລັງກ່າວ, ເຊື້ອສາຍຂອງອິດສະຣາເອນເອີຍ; ເຮົາຮູ້ວ່າ ໃນຫົວຂອງພວກເຈົ້າຄິດຫຍັງຢູ່.6ພວກເຈົ້າ
ໄດ້ຂ້າຜູ້ຄົນຈຳນວນຫລາຍໃນເມືອງນີ້ ແລະ ຕາມຖະຫນົນຫົນທາງກໍເຕັມໄປດ້ວຍຊາກສົບ.7ເພາະສະນັ້ນ, ພຣະຢາເວ ພຣະຜູ້ເປັນເຈົ້າ
ຊົງກ່າວດັ່ງນີ້ວ່າ: ປະຊາຊົນທີ່ພວກເຈົ້າໄດ້ຂ້າ, ຊາກສົບທີ່ພວກເຈົ້າໄດ້ຖິ້ມໄວ້ທ່າມກາງນະຄອນເຢຣູຊະເລມນີ້, ເປັນຊີ້ນ, ແລະ ເມືອງນີ້ເປັນຫມໍ້.
ແຕ່ພວກເຈົ້າຈະຖືກນຳອອກໄປຈາກກາງເມືອງນີ້.
8ພວກເຈົ້າໄດ້ຢ້ານກົວຄົມດາບ, ດັ່ງນັ້ນ ເຮົາກໍຈະນຳດາບມາເຫນືອພວກເຈົ້າ—ນີ້ເປັນສິ່ງທີ່ພຣະຢາເວ ອົງພຣະຜູ້ເປັນເຈົ້າ ຊົງປະກາດໄວ້ດັ່ງນີ້.
9ເຮົາຈະນຳພວກເຈົ້າອອກຈາກກາງເມືອງ, ແລະ ມອບພວກເຈົ້າໄວ້ໃນມືຂອງຄົນຕ່າງຊາດ, ເພື່ອເຮົາຈະນຳການຕັດສິນມາຕໍ່ສູ້ພວກເຈົ້າ.
10ພວກເຈົ້າຈະຖືກລົ້ມຕາຍດ້ວຍດາບ. ເຮົາຈະລົງໂທດພວກເຈົ້າຢູ່ເຂດແດນຂອງອິດສະຣາເອນ ດັ່ງນັ້ນ ພວກເຈົ້າຈະໄດ້ຮູ້ວ່າ ເຮົາແມ່ນພຣະ-
ຢາເວ.
11ເມືອງນີ້ຈະບໍ່ແມ່ນຫມໍ້ແຕ່ງອາຫານສຳລັບພວກເຈົ້າ, ພວກເຈົ້າຈະບໍ່ແມ່ນຊີ້ນໃນທ່າມກາງນາງ. ເຮົາຈະລົງໂທດເຈົ້າຢູ່ເຂດແດນ
ຂອງອິດສະຣາເອນ.12ແລ້ວ ພວກເຈົ້າຈະຮູ້ວ່າເຮົາແມ່ນ ພຣະຢາເວ, ຜູ້ຊຶ່ງພວກເຈົ້າບໍ່ໄດ້ເດີນຕາມ ແລະ ຖືຮັກສາກົດບັນຍັດຂອງເຮົາ.
ແຕ່ພວກເຈົ້າໄດ້ປະພຶດຕາມກົດຫມາຍຂອງປະຊາຊາດທັງຫລາຍທີ່ຢູ່ອ້ອມຮອບພວກເຈົ້າ."
13ມັນໄດ້ເກີດຂຶ້ນ ຂະນະທີ່ຂ້ານ້ອຍກຳລັງທຳນວາຍ, ເປລາຕີຢາລູກຊາຍຂອງເບນາຢາ, ກໍສິ້ນຊີວິດໄປ. ແລ້ວຂ້ານ້ອຍກໍກົ້ມຫນ້າລົງເຖິງດິນ ແລະ
ຮ້ອງສຽງດັງ ແລະ ເວົ້າວ່າ, "ອະນິຈັງ! ພຣະຢາເວ ອົງພຣະຜູ້ເປັນເຈົ້າ, ພຣະອົງຈະຊົງທຳລາຍລ້າງຄົນອິດສະຣາເອນທີ່ເຫລືອຢູ່ນີ້ໃຫ້ຫມົດສິ້ນ
ບໍ?"
14ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,15"ບຸດແຫ່ງມະນຸດເອີຍ, ພີ່ນ້ອງຂອງພວກເຈົ້າເອີຍ! ພີ່ນ້ອງຂອງພວກເຈົ້າເອີຍ!
ຜູ້ຊາຍທັງຫລາຍໃນຕະກຸນຂອງພວກເຈົ້າ ແລະ ເຊື້ອສາຍຂອງອິດສະຣາເອນທັງຫມົດ! ພວກເຂົາທັງຫມົດເປັນຜູ້ທີ່ກ່າວດເຖິງດ້ວຍຜູ້ທີ່
ອາໄສຢູ່ໃນນະຄອນເຢຣູຊາເລັມ, 'ພວກເຂົາຫ່າງໄກຈາກພຣະຢາເວ! ດິນແດນນີ້ ຈຶ່ງຖືກມອບໄວ້ໃຫ້ເປັນກຳມະສິດຂອງພວກເຮົາ.'
16ເພາະສະນັ້ນ ຈົ່ງກ່າວວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ວ່າ: ເຖິງວ່າ ເຮົາໄດ້ເອົາພວກເຂົາອອກໄປຢູ່ທ່າມກາງປະຊາຊາດທັງ-
ຫລາຍ, ແລະ ເຖິງວ່າ ເຮົາໄດ້ເຮັດໃຫ້ພວກເຂົາກະຈັດກະຈາຍໄປຢູ່ທ່າມກາງແຜ່ນດິນຕ່າງໆ, ແຕ່ຢ່າງໃດກໍຕາມ ເຮົາກໍເປັນບ່ອນສັກສິດສຳລັບ
ພວກເຂົາຊົ່ວຄາວໃນແຜ່ນດິນທີ່ພວກເຂົາໄດ້ໄປຢູ່ນັ້ນ.'17ສະນັ້ນ ຈົ່ງກ່າວວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ວ່າ: ເຮົາຈະ
ເຕົ້າໂຮມພວກເຈົ້າຈາກປະຊາຊົນເຫລົ່ານັ້ນ, ແລະ ເຮົາຈະປຸ້ມລຸມພວກເຈົ້າຈາກດິນແດນທີ່ພວກເຈົ້າໄດ້ກະຈັດກະຈາຍໄປ, ແລະ
ເຮົາຈະມອບດິນແດນແຫ່ງອິດສະຣາເອນໃຫ້ແກ່ເຈົ້າ.'18ແລ້ວ ພວກເຂົາຈະໄປຍັງທີ່ນັ້ນ ແລະ ກຳຈັດທຸກສິ່ງທີ່ຫນ້າລັງກຽດ ແລະ
ທຸກສິ່ງທີ່ຫນ້າລັງກຽດຈາກສະຖານທີ່ແຫ່ງນັ້ນ.
19ເຮົາຈະໃຫ້ພວກເຂົາມີຈິດໃຈອັນດຽວກັນ, ແລະ ເຮົາຈະໃສ່ຈິດວິນຍານໃຫມ່ໄວ້ໃນພວກເຂົາ. ເຮົາຈະເອົາໃຈຫີນອອກໄປເສຍຈາກເນື້ອຫນັງ
ຂອງພວກເຂົາ ແລະ ເອົາໃຈເນື້ອໃຫ້ແກ່ພວກເຂົາ,20ເພື່ອວ່າ ພວກເຂົາຈະດຳເນີນຕາມກົດບັນຍັດຂອງເຮົາ, ພວກເຂົາຈະຖືຮັກສາ ແລະ
ເຮັດຕາມກົດຫມາຍນັ້ນ. ແລ້ວ ພວກເຂົາທັງຫລາຍຈະເປັນປະຊາຊົນຂອງເຮົາ ແລະ ເຮົາຈະເປັນພຣະເຈົ້າຂອງພວກເຂົາ.21ແຕ່
ສ່ວນຜູ້ທີ່ເດີນໄປກັບຄວາມຮັກຕໍ່ສິ່ງທີ່ຫນ້າລັງກຽດ ແລະ ກຽດຊັງເຫລົ່ານັ້ນ. ເຮົາຈະນຳເອົາການກະທຳຂອງພວກເຂົາ
ມາໄວ້ເຫນືອຫົວຂອງພວກເຂົາ—ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງປະກາດດັ່ງນີ້ແຫລະ."
22ເຫລົ່າເຄຣຸບກໍກາງປີກທັງຫລາຍຂອງພວກມັນອອກ ແລະ ກົງລໍ້ກໍຢູ່ຂ້າງຂອງພວກມັນ, ແລະ ພຣະສະຫງ່າຣາສີຂອງພຣະເຈົ້າແຫ່ງ
ອິດສະຣາເອນຢູ່ເຫນືອເຄຣຸບເຫລົ່ານັ້ນ.23ຈາກນັ້ນ ພຣະສະຫງ່າຣາສີຂອງພຣະຢາເວໄດ້ເຄື່ອນຂຶ້ນໄປຈາກກາງເມືອງນັ້ນ ແລະ ຢືນຢູ່ເຫນືອພູ-
ເຂົາທາງທິດຕາເວັນອອກຂອງເມືອງນັ້ນ.
24ພຣະວິນຍານໄດ້ຊົງຍົກຂ້ານ້ອຍຂຶ້ນ ແລະ ນຳພາຂ້ານ້ອຍມາຍັງເຫລົ່າຊະເລີຍໃນເຄເດຍ, ໃນນິມິດ ພຣະວິນຍານຂອງພຣະເຈົ້າ, ແລະ
ນິມິດທີ່ຂ້ານ້ອຍໄດ້ເຫັນກໍຂຶ້ນໄປຈາກຂ້ານ້ອຍ.25ແລ້ວ ຂ້ານ້ອຍຈຶ່ງໄດ້ປະກາດສິ່ງຕ່າງໆ
ທີ່ພຣະຢາເວໄດ້ສຳແດງໃຫ້ຂ້ານ້ອຍໄດ້ເຫັນຕໍ່ພວກຊະເລີຍທັງຫລາຍຟັງ.

12 [1]ພຣະທຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດມະນຸດເອີຍ" ເຈົ້າອາໄສຢູ່ທ່າມກາງເຊື້ອສາຍກະບົດ, ພວກເຂົາມີຕາເພື່ອເບິ່ງ ແຕ່
ພວກເຂົາບໍ່ເຫັນ; ແລະ ພວກເຂົາມີຫູເພື່ອຟັງ, ແຕ່ບໍ່ໄດ້ຍິນ, ເພາະພວກເຂົາເປັນເຊື້ອສາຍກະບົດ.

[3]ເພາະສະນັ້ນ ສຳລັບເຈົ້າ, ບຸດແຫ່ງມະນຸດເອີຍ, ຈົ່ງຈັດຕຽມເຄື່ອງຂອງສຳລັບການເປັນຊະເລີຍ, ແລະ
ເລີ່ມອອກໄປໃນເວລາກາງເວັນໃຫ້ພວກເຂົາໄດ້ເຫັນ, ເພື່ອເຮົາຈະເນລະເທດເຈົ້າໃຫ້ພວກເຂົາເຫັນ ຈາກບ່ອນທີ່ພວກເຈົ້າຢູ່ໄປອີກບ່ອນຫນຶ່ງ.
ບາງທີພວກເຂົາອາດເລີ່ມເຫັນ, ເຖິງວ່າພວກເຂົາເປັນເຊື້ອສາຍກະບົດກໍ່ຕາມ.
[4]ເຈົ້າຈະນຳສິ່ງຂອງ ຂອງເຈົ້າອອກໄປເພື່ອເປັນຊະເລີຍໃນເວລາກາງເວັນໃຫ້ພວກເຂົາເຫັນ; ອອກໄປໃຫ້ພວກເຂົາເຫັນໃນເວລາຕອນແລງ
ເຫມືອນທຸກຄົນທີ່ຖືກກວາດໄປເປັນຊະເລີຍ.[5]ຈົ່ງເຈາະຊ່ອງກຳແພງໃຫ້ພວກເຂົາເຫັນ, ແລະ ຈົ່ງລອດຮູກຳແພງອອກໄປ.[6]ຈົ່ງຍົກເຄື່ອງຂອງໃສ່ບ່າ
ຂອງເຈົ້າ ແລະ ແບກອອກໄປໃນເວລາມືດໃຫ້ພວກເຂົາເຫັນ.ຈົ່ງປົກຫນ້າເຈົ້າໄວ້, ເພື່ອເຈົ້າຈະບໍ່ເຫັນແຜ່ນດິນ, ເພາະເຮົາຕັ້ງເຈົ້າໃຫ້ເປັນຫມາຍ
ສຳຄັນແກ່ເຊື້ອສາຍອິດສະຣາເອນ."
[7]ດັ່ງນັ້ນ ຂ້ານ້ອຍຈຶ່ງເຮັດຕາມຄຳສັ່ງນີ້, ຂ້ານ້ອຍໄດ້ກະກຽມເອົາເຄື່ອງຂອງອອກມາ ເພື່ອການຖືກກວາດໄປເປັນຊະເລີຍໃນກາງເວັນ ແລະ ໃນ
ເວລາຕອນຄ່ຳ ຂ້ານ້ອຍ ກໍເຈາະກຳແພງດ້ວຍມື. ຂ້ານ້ອຍຂົນເຄື່ອງອອກໄປໃນເວລາມືດ, ແລະ ແບກເຄື່ອງຂອງ
ໃສ່ບ່າອອກໄປໃຫ້ພວກເຂົາເຫັນ.
[8]ແລ້ວ ພຣະທຳຂອງພຣະຢາເວມາເຖິງຂ້ານ້ອຍໃນຕອນເຊົ້າ, ກ່າວວ່າ,[9]"ບຸດແຫ່ງມະນຸດເອີຍ, ເຊື້ອສາຍອິດສະຣາເອນ,ເຊື້ອສາຍທີ່ກະບົດນັ້ນ,
ບໍ່ໄດ້ຖາມບໍວ່າ, 'ເຈົ້າກຳລັງເຮັດຫຍັງ?'[10]ຈົ່ງບອກແກ່ພວກເຂົາວ່າ, 'ພຣະຢາເວອົງຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ວ່າ: ນີ້ເປັນຄຳທຳນວາຍກ່ຽວຂ້ອງກັບ
ເຈົ້າ ເຈົ້າຊາຍໃນນະຄອນເຢຣູຊາເລັມ, ແລະ ເຊື້ອສາຍອິສຣາເອນໃນທ່າມກາງພວກເຂົານັ້ນ.'
[11]ກ່າວວ່າ, 'ຂ້ານ້ອຍເປັນຫມາຍສຳຄັນສຳລັບພວກທ່ານ. ຂ້ານ້ອຍໄດ້ເຮັດແລ້ວ, ດັ່ງນັ້ນ ສິ່ງນີ້ກໍຈະເກີດຂຶ້ນກັບພວກເຂົາ; ພວກເຂົາຈະ
ຖືກກວາດລ້າງ ແລະ ໄປເປັນຊະເລີຍ.[12]ເຈົ້າຊາຍຜູ້ທີ່ຢູ່ທ່າມກາງພວກເຂົາ ຈະແບກເຄື່ອງຂຶ້ນໃສ່ບ່າໃນເວລາມືດ, ແລະ ອອກໄປທາງກຳແພງ.
ພວກເຂົາຈະເຈາະຮູຜ່ານກຳແພງ ແລະ ແບກເຄື່ອງຂອງພວກເຂົາອອກໄປ. ພວກເຂົາຈະປົກຫນ້າຂອງຕົນ, ເພື່ອວ່າເຂົາຈະບໍ່ເຫັນແຜ່ນດິນດ້ວຍ
ສາຍຕາຂອງພວກເຂົາ.[13]ເຮົາຈະກາງຕາຫນ່າງຂອງເຮົາອອກເທິງລາວ ແລະ ລາວຈະຕິດກັບຕາຫນ່າງຂອງເຮົາ; ແລ້ວເຮົາຈະນຳລາວເຂົ້າໄປໃນ
ບາບີໂລນ, ແຜ່ນດິນຂອງເຄເດຍ, ແຕ່ລາວຈະບໍ່ເຫັນແຜ່ນດິນນັ້ນ. ແລະ ລາວຈະຕາຍຢູ່ບ່ອນນັ້ນ.
[14]ເຮົາຈະກະຈັດກະຈາຍຄົນທັງຫລາຍທີ່ຢູ່ອ້ອມຮອບລາວ ຄົນທີ່ຊ່ວຍລາວ ຕະຫລອດຈົນເຖິງກອງທະຫານຂອງລາວໄປຢູ່ທຸກທີ່ທຸກບ່ອນ, ແລະ
ເຮົາຈະສິ່ງດາບອອກໄປໄລ່ລ້າພວກເຂົາ.[15]ເພື່ອພວກເຂົາຈະວ່າເຮົາແມ່ນພຣະຢາເວ, ເມື່ອເຮົາກະຈັດກະຈາຍພວກເຂົາໄປຢູ່ທ່າມກາງຊົນ-
ຊາດອື່ນ ແລະ ເຮັດໃຫ້ພວກເຂົາກະຈັດກະຈາຍໄປຕາມແຜ່ນດິນຕ່າງໆ.[16]ແຕ່ເຮົາຈະ-
ໄວ້ຊີວິດພວກຜູ້ຊາຍບາງຄົນໃນທ່າມກາງພວກເຂົາໃຫ້ພົ້ນຈາກຄົມດາບ, ຄວາມອຶດຢາກ, ແລະ ໄພພິບັດ, ເພື່ອພວກເຂົາຈະໄດ້
ບັນທຶກເຖິງການກະທຳອັນຫນ້າລັງກຽດທັງຫມົດຂອງພວກເຂົາໃນດິນແດນທີ່ຊຶ່ງເຮົາໄດ້ເອົາພວກເຂົາໄປ, ດັ່ງນັ້ນ ພວກເຂົາຈະຮູ້ວ່າເຮົາແມ່ນ
ພຣະຢາເວ."
[17]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[18]"ບຸດແຫ່ງມະນຸດເອີຍ, ຈົ່ງກິນອາຫານຂອງເຈົ້າດ້ວຍຕົວສັ່ນ, ແລະ ດື່ມນ້ຳ
ຂອງພວກເຈົ້າດ້ວຍຄວາມສະທ້ານຫວັ່ນໄຫວ ແລະ ກັງວົນ.
[19]ແລ້ວຈົ່ງກ່າວແກ່ປະຊາຊົນແຫ່ງແຜ່ນດິນວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ກ່ຽວກັບບັນດາຜູ້ອາໄສຢູ່ນະຄອນເຢຣູຊາເລັມ,
ແລະ ໃນແຜ່ນດິນອິດສະຣາເອນວ່າ: ພວກເຂົາຈະກິນເຂົ້າຈີ່ຂອງຕົນດ້ວຍໂຕສັ່ນ ແລະ ດື່ມນ້ຳດ້ວຍຄວາມສະທ້ານຫວັ່ນໄຫວ,
ເນື່ອງຈາກຄວາມອຸດົມສົມບູນໃນແຜ່ນດິນຈະຖືກທຳລາຍ ເພາະຄວາມຮຸນແຮງຂອງບັນດາຄົນທັງປວງທີ່ອາໄສຢູ່ນັ້ນ.[20]ສະນັ້ນ ເມືອງທັງຫລາຍທີ່
ມີຄົນອາໄສຢູ່ຈະຮ້າງເປົ່າ ແລະ ແຜ່ນດິນຈະກາຍເປັນບ່ອນເປົ່າວ່າງ; ດັ່ງນັ້ນ ເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ."
[21]ພຣະທຳຂອງພຣະຢາເວມາເຖິງຂ້ານ້ອຍອີກຄັ້ງ, ກ່າວວ່າ,[22]"ບຸດຂອງມະນຸດເອີຍ, ສຸພາສິດອັນໃດທີ່ເຈົ້າມີໃນແຜ່ນດິນອິດສະຣາເອນທີ່ເວົ້າວ່າ,
'ວັນເຫລົ່ານັ້ນກໍໄກອອກໄປ ແລະ ນິມິດທຸກຢ່າງກໍລະລາຍໄປ?'[23]ສະນັ້ນ, ຈົ່ງກ່າວແກ່ຄົນທັງຫລາຍວ່າ, ພຣະຢາເວ ອົງພຣະຜູ້ເປັນເຈົ້າ
ຊົງກ່າວວ່າ: ເຮົາຈະໃຫ້ສຸພາສິດບົດນີ້ສິ້ນສຸດລົງ, ແລະ ປະຊາຊົນແຫ່ງອິດສະຣາເອນ ຈະບໍ່ໃຊ້ມັນອີກຕໍ່ໄປ.' ແຕ່ຈົ່ງກ່າວແກ່ພວກເຂົາວ່າ,
'ວັນເຫລົ່ານັ້ນກໍໃກ້ເຂົ້າມາ ຄືເວລາທີ່ນິມິດທຸກຢ່າງກໍເປັນຈິງແລ້ວ.
[24]ເພາະຈະບໍ່ມີນິມິດປອມ ຫລື ຄຳທຳນວາຍທີ່ເວົ້າເອົາໃຈຄົນໃນເຊື້ອສາຍອິດສະຣາເອນອີກຕໍ່ໄປ.[25]ເພາະເຮົາຄືພຣະຢາເວ! ເຮົາກ່າວ ແລະ
ເຮົາດຳເນີນໃນຖ້ອຍຄຳທັງຫລາຍທີ່ເຮົາໄດ້ກ່າວ. ສິ່ງນີ້ ຈະບໍ່ຊັກຊ້າອີກຕໍ່ໄປ. ເພາະເຮົາຈະກ່າວຖ້ອຍຄຳນີ້ໃນວັນທັງຫລາຍຂອງເຈົ້າ, ເຊື້ອສາຍ
ທີ່ມັກກະບົດເອີຍ, ແລະ ເຮົາຈະເຮັດສິ່ງທີ່ເຮົາໄດ້ກ່າວ!—ນີ້ເປັນປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'"
[26]ອີກຄັ້ງທີ່ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[27]"ບຸດແຫ່ງມະນຸດເອີຍ! ເບິ່ງແມ໋, ເຊື້ອສາຍຂອງອິດສະຣາເອນເວົ້າວ່າ, 'ນິມິດ ທີ່
ລາວເຫັນເປັນເລື່ອງໃນອີກຫລາຍວັນນັບຈາກຕອນນີ້, ແລະ ລາວທຳນວາຍເຖິງເລື່ອງທີ່ຍັງຫ່າງໄກ.'[28]ເພາະສະນັ້ນ ຈົ່ງກ່າວແກ່ພວກເຂົາວ່າ,
ພຣະຢາເວ ອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ: ຖ້ອຍຄຳຂອງເຮົາຈະບໍ່ຊັກຊ້າອີກຕໍ່ໄປ, ແຕ່ຖ້ອຍຄຳທີ່ເຮົາກ່າວອອກໄປນັ້ນຈະຕ້ອງສຳເລັດແທ້—
ນີ້ເປັນການປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ."

 generated on Tue Jun 17 19:01:42 2025

13 [1]ອີກຄັ້ງ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດແຫ່ງມະນຸດເອີຍ, ຈົ່ງທຳນວາຍຕໍ່ສູ້ບັນດາຜູ້ປະກາດພຣະຄຳ
ທີ່ທຳນວາຍໃນອິດສະຣາເອນ, ແລະຈົ່ງກ່າວແກ່ຄົນເຫລົ່ານັ້ນທີ່ກຳລັງທຳນວາຍຕາມຈິນຕະນາການຂອງຕົນວ່າ 'ຈົ່ງຟັງຖ້ອຍຄຳຂອງ
ພຣະຢາເວ.[3]ພຣະຢາເວ ອົງພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ວ່າ: ວິບັດແກ່ເຫລົ່າຜູ້ປະກາດພຣະຄຳໂງ່ຈ້າ ຊຶ່ງເຮັດຕາມວິນຍານຂອງພວກເຂົາເອງ,
ແຕ່ບໍ່ເຄີຍໄດ້ເຫັນຫຍັງເລີຍ.[4]ອິດສະຣາເອນເອີຍ, ພວກຜູ້ປະກາດພຣະທຳຂອງພວກເຈົ້າເປັນເຫມືອນດັ່ງຫມາຈິ້ງຈອກຢູ່ທ່າມກາງສິ່ງທີ່ຮົກຮ້າງ
ເພພັງ.

[5]ພວກເຈົ້າບໍ່ໄດ້ປີນຂຶ້ນໄປບ່ອນແຕກຂອງກຳແພງຂອງເຊື້ອສາຍອິດສະຣາເອນ, ເພື່ອແປງມັນ, ເພື່ອຕ້ານທານສົງຄາມໃນວັນແຫ່ງພຣະຢາເວ.
[6]ພວກເຂົາ, ມີນິມິດປອມ ແລະ ຄຳນວາຍຂີ້ຕົວະ, ພວກຄົນທີ່ກ່າວວ່າ"ຢ່າງນັ້ນ ແລະ ຢ່າງນີ້ ແມ່ນການປະກາດຂອງພຣະຢາເວ." ພຣະຢາເວ
ບໍ່ເຄີຍໄດ້ສົ່ງພວກເຂົາໄປ, ແຕ່ເຖິງຢ່າງໃດກໍຕາມ ພວກເຂົາໄດ້ເຮັດໃຫ້ຄົນອື່ນຫວັງວ່າຈະສຳເລັດຕາມຖ້ອຍຄຳຂອງຕົນ[7]ພວກເຈົ້າບໍ່ເຄີຍເຫັນນິ-
ມິດປອມ ແລະ ຄຳທຳນວຍຂີ້ຕົວະ, ພວກເຈົ້າ ຜູ້ກ່າວວ່າ, "ເຊັ່ນນັ້ນ ແລະ ເຊັ່ນນີ້ ແມ່ນປະກາດຂອງພຣະຢາເວ" ໃນຂະນະທີ່ເຮົາຍັງບໍ່ເຄີຍກ່າວ
ຫຍັງເລີຍ?'
[8]ສະນັ້ນ ພຣະຢາເວ ອົງພຣຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເພາະວ່າພວກເຈົ້າໄດ້ມີນິມິດບໍ່ປອມ ແລະ ກ່າວຄຳຂີ້ຕົວະ — ດັ່ງນັ້ນ
ນີ້ເປັນການປະກາດຕໍ່ສູ້ພວກເຈົ້າຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.[9]ມືຂອງເຮົາຈະຕໍ່ສູ້ກັບບັນດາຜູ້ປະກາດພຣະຄຳ ຜູ້ມີນິມິດຂີ້ຕົວະ ແລະ ຄຳ
ທຳນວຍຂີ້ຕົວະ. ພວກເຂົາຈະບໍ່ໄດ້ເຂົ້າຮ່ວມໃນທີ່ຊຸມນຸມປະຊາຊົນຂອງເຮົາ, ຫລື ຂຶ້ນທະບຽນຢູ່ໃນສຳມະໂນຄົວຂອງເຊື້ອສາຍອິດສະຣາເອນ;
ພວກເຈົ້າຈະບໍ່ໄດ້ເຂົ້າໃນແຜ່ນດິນອິດສະຣາເອນ ແລະ ພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວອົງພຣະຜູ້ເປັນເຈົ້າ!
[10]ເພາະເຫດນີ້, ແລະ ເພາະພວກເຂົາໄດ້ນຳພາປະຊາຊົນຂອງເຮົາໃຫ້ຫລົງໄປ ແລະ ໂດຍກ່າວວ່າ, "ສັນຕິສຸກ!" ທັງໆທີ່ບໍ່ມີສັນຕິສຸກເລີຍ,
ພວກເຂົາກຳລັງສ້າງກຳແພງ ແລ້ວພວກເຂົາຈະໂບກດ້ວຍປູນຂາວ.'[11]ຈົ່ງກ່າວແກ່ຜູ້ທີ່ໂບກກຳແພງນັ້ນວ່າ 'ມັນຈະເພພັງລົງ; ຈະມີຝົນ-
ຕົກລົງມາຢ່າງຫນັກ, ແລະ ເຮົາຈະສົ່ງພາຍຸຫມາກເຫັບມາ ເພື່ອເຮັດໃຫ້ມັນເພພັງລົງ, ແລະ ລົມພາຍຸກໍຈະພັດເພື່ອທຳລາຍມັນໃຫ້ເພພັງລົງ.
[12]ເບິ່ງແມ໋, ກຳແພງຈະເພພັງລົງ. ຍັງບໍ່ມີໃຜບອກພວກເຈົ້າບໍ, "ປູນຂາວທີ່ເຈົ້າໄດ້ໂບກນັ້ນຢູ່ໃສ?"
[13]ສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະເຮັດໃຫ້ລົມພາຍຸມາດ້ວຍຄວາມໂກດຮ້າຍຂອງເຮົາ,
ແລະຈະມີນ້ຳຖ້ວມດ້ວຍຫ່າຝົນທີ່ຕົກລົງຢ່າງແຮງດ້ວຍຄວາມໂກດຮ້າຍຂອງເຮົາ! ພາຍຸຫມາກເຫັບທີ່ມາດ້ວຍຄວາມຄຽດຮ້າຍຂອງເຮົາຈະທຳ-
ລາຍມັນຈົນສິ້ນຊາກ.[14]ເພາະເຮົາຈະທຳລາຍກຳແພງຊຶ່ງເຈົ້າໄດ້ໂບກດ້ວຍປູນຂາວນັ້ນ, ແລະ ເຮົາມ້າງມັນລົງເຖິງດິນຈົນເຫັນຖານຂອງກຳແພງ
ນັ້ນ. ດັ່ງນັ້ນ ມັນຈະເພພັງລົງ ແລະ ພວກເຈົ້າຈະຖືກທຳລາຍລ້າງໃນທ່າມກາງຂອງສິ່ງເຫລົ່ານັ້ນ. ແລ້ວເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ.
[15]ເພາະເຮົາຈະທຳລາຍລ້າງດ້ວຍຄວາມໂກດຮ້າຍຂອງເຮົາ ແລະ ຜູ້ທີ່ໂບກມັນໄວ້ດ້ວຍປູນຂາວ. ເຮົາຈະກ່າວກັບເຈົ້າວ່າ, "ກຳແພງບໍ່ມີອີກຕໍ່ໄປ,
ແລະ ຄົນທັງຫລາຍທີ່ໂບກປູນຂາວກໍບໍ່ມີອີກຕໍ່ໄປເຊັ່ນກັນ—[16]ບັນດາຜູ້ປະກາດພຣະຄຳແຫ່ງອິດສະຣາເອນ ຜູ້ທຳນວາຍກ່ຽວກັບນະຄອນເຢຣູ-
ຊາເລັມ ແລະ ຜູ້ທີ່ໄດ້ເຫັນນິມິດແຫ່ງສັນຕິສຸກຂອງນະຄອນນັ້ນ. ແຕ່ທັງທີ່ບໍ່ມີສັນຕິສຸກເລີຍ! — ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້-
ແຫລະ."'
[17]ດັ່ງນັ້ນ, ບຸດແຫ່ງມະນຸດເອີຍ, ຈົ່ງມຸ່ງຫນ້າຕໍ່ສູ້ບັນດາລູກສາວຂອງພວກເຈົ້າຜູ້ທຳນວາຍຕາມແນວຄິດຂອງພວກເຂົາ, ແລະ ຈົ່ງທຳນວາຍຕໍ່ສູ້
ພວກເຂົາ.[18]ກ່າວວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ວິບັດແກ່ຜູ້ຍິງທີ່ຫຍິບຜ້າຍັນສະເຫນ່ໃສ່ແຂນເສື້ອທັງຫລາຍ ແລະ ຜ້າປົກ
ຫົວຂອງເຂົາທຸກຂະຫນາດ ເພື່ອຕາມລ່າປະຊາຊົນ. ພວກເຈົ້າຈະຕາມລ່າປະຊາຊົນຂອງເຮົາ, ແຕ່ຮັກສາຊີວິດຂອງຕົນເອງໄດ້ບໍ?
[19]ພວກເຈົ້າໄດ້ດູຫມິ່ນເຮົາ ໃນຫມູ່ປະຊາຊົນຂອງເຮົາ ເພາະເຫັນແກ່ເຂົ້າບາເລເປັນກຳ ແລະ ເສດເຂົ້າຈີ່, ເພື່ອຂ້າປະຊາຊົນທັງຫລາຍຜູ້ທີ່ບໍ່
ສົມຄວນຕາຍ, ແລະ ເພື່ອຮັກສາຊີວິດຄົນທີ່ບໍ່ສົມຄວນຈະມີຊີວິດຢູ່ໃຫ້ໄດ້ຢູ່ຕໍ່, ຍ້ອນການຂີ້ຕົວະຂອງເຈົ້າຕໍ່ປະຊາຊົນຂອງເຮົາ ຜູ້ຊຶ່ງໄດ້ຟັງ
ພວກເຈົ້າ.
[20]ດ້ວຍເຫດນີ້ ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຕໍ່ສູ້ເວດມົນສະເຫນ່ທີ່ພວກເຈົ້າໃຊ້
ເພື່ອເຮັດໃຫ້ຊີວິດຂອງປະຊາຊົນຕົກເປັນເຫຍື່ອຢ່າງທີ່ພວກເຂົາໄລ່ລ່ານົກ. ແນ່ນອນ, ເຮົາຈະຈີກຜ້າຍັນນັ້ນເສຍຈາກແຂນຂອງພວກເຈົ້າ; ແລະ
ຈາກປະຊາຊົນຜູ້ຊຶ່ງພວກເຈົ້າໄດ້ດັກຈັບເຫມືອນຈັບນົກ — ເຮົາຈະປ່ອຍໃຫ້ພວກເຂົາເປັນອິດສະຫລະ[21]ເຮົາຈະຈີກຜ້າປົກຫົວຂອງພວກເຈົ້າ
ເສຍ ແລະ ຊ່ວຍເຫລືອປະຊາຊົນຂອງເຮົາໃຫ້ພົ້ນຈາກມືຂອງພວກເຈົ້າ, ແລ້ວພວກເຂົາຈະບໍ່ຕົກເປັນເຫຍື່ອໃນມືຂອງພວກເຈົ້າອີກຕໍ່ໄປ.
ພວກເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ.
[22]ເພາະພວກເຈົ້າເຮັດໃຫ້ຄົນຊອບທຳທໍ້ໃຈດ້ວຍການຂີ້ຕົວະ, ທັງທີ່ເຮົາບໍ່ໄດ້ປາຖະຫນາໃຫ້ພວກເຂົາທໍ້ຖອຍໃຈເລີຍ, ແລະ
ເພາະພວກເຈົ້າສະຫນັບສະຫນູນການກະທຳຂອງຄົນຊົ່ວ ດັ່ງນັ້ນ ເຂົາຈະບໍ່ກັບຈາກທາງຂອງເຂົາ ເພື່ອຈະຮັກສາຊີວິດຂອງເຂົາ —[23]ສະນັ້ນ
ພວກເຈົ້າຈະບໍ່ໄດ້ເຫັນນິມິດປອມ ຫລື ເຮັດການທຳນວາຍໄດ້ອີກ, ດ້ວຍວ່າເຮົາຈະຊ່ວຍປະຊາຊົນຂອງເຮົາໃຫ້ພົ້ນຈາກມືຂອງພວກເຈົ້າ. ເຈົ້າ
ຈະຮູ້ວ່າເຮົາແມ່ນພຣະຢາເວ."'

 generated on Tue Jun 17 19:01:42 2025

14 [1]ພວກຜູ້ໃຫຍ່ຂອງອິດສະຣາເອນບາງຄົນມາຫາຂ້ານ້ອຍ ແລະ ມານັ່ງຢູ່ຕໍ່ໜ້າຂ້ານ້ອຍ.[2]ແລ້ວພຣະທຳຂອງພຣະຢາເວອົງພຣະຜູ້ເປັນເຈົ້າ
ມາເຖິງຂ້ານ້ອຍ, ກ່າວວ່າ,[3]"ບຸດແຫ່ງມະນຸດເອີຍ, ຄົນເຫລົ່ານີ້ໄດ້ຢຶດເອົາຮູບເຄົາລົບຢູ່ໃນໃຈຂອງພວກເຂົາ ແລະ ພວກເຂົາໄດ້ສະດຸດຕໍ່-
ຄວາມຊົ່ວຊ້າຂອງເຂົາຕໍ່ໜ້າພວກເຂົາເອງ. ເຮົາຄວນຈະຖືກສອບໃນສິ່ງເຫລົ່ານີ້ດ້ວຍພວກເຂົາບໍ?

[4]ສະນັ້ນ ຈົ່ງປະກາດສິ່ງນີ້ແກ່ພວກເຂົາ, ແລະ ຈົ່ງກ່າວແກ່ພວກເຂົາວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ: ຜູ້ຊາຍແຕ່ລະຄົນໃນເຊື້ອ-
ສາຍອິດສະຣາເອນເອົາຮູບເຄົາລົບຕ່າງໆໄວ້ໃນໃຈຂອງຕົນ, ຫລື ຜູ້ໃດເອົາສິ່ງຄວາມຊົ່ວຊ້າຊຶ່ງເຮັດໃຫ້ສະດຸດໄວ້ຕໍ່ໜ້າຕົນເອງ, ແລະ ຍັງມາ
ຫາຜູ້ປະກາດພຣະທຳ — ເຮົາ, ແມ່ນພຣະຢາເວ ຈະຕອບເຂົາເອງກ່ຽວກັບຮູບເຄົາລົບຫລວງຫລາຍຂອງເຂົາ.[5]ເຮົາຈະເຮັດເຊັ່ນນີ້
ເພື່ອເຮົາຈະເອົາຫົວໃຈຂອງເຊື້ອສາຍອິດສະຣາເອນ ທີ່ໄປຫ່າງໄກຈາກເຮົາ ເນື່ອງຈາກຮູບເຄົາລົບຂອງພວກເຂົາ ນັ້ນກັບຄືນມາ.'
[6]ສະນັ້ນ ຈົ່ງກ່າວແກ່ເຊື້ອສາຍອິດສະຣາເອນວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ: ຈົ່ງກັບໃຈໃຫມ່ ແລະ ຫັນຫລັງຈາກຮູບເຄົາ-
ລົບທັງຫລາຍຂອງເຈົ້າເສຍ! ຈົ່ງຫັນໜ້າຂອງພວກເຈົ້າຈາກບັນດາສິ່ງໜ້າກຽດຊັງຂອງພວກເຈົ້າ.
[7]ເພາະວ່າທຸກຄົນໃນເຊື້ອສາຍອິດສະຣາເອນ ແລະ ຊາວຕ່າງຊາດທຸກຄົນທີ່ອາໄສຢູ່ໃນອິດສະຣາເອນ ຄືຜູ້ປະຖິ້ມເຮົາ, ຜູ້ທີ່ຖືເອົາຮູບເຄົາລົບໄວ້
ໃນໃຈຂອງຕົນ ແລະ ເອົາຄວາມຊົ່ວຊ້າທີ່ເຮັດໃຫ້ສະດຸດໄວ້ຕໍ່ໜ້າຂອງຕົນ, ແລະ ຜູ້ທີ່ຍັງຈະມາຫາຜູ້ປະກາດພຣະທຳ ເພື່ອສະແຫວງຫາເຮົາ
— ເຮົາ, ແມ່ນພຣະຢາເວ, ຈະຕອບຄົນນັ້ນເອງ.[8]ດັ່ງນັ້ນ ເຮົາຈະມຸ່ງໜ້າຂອງເຮົາຕໍ່ສູ້ຄົນນັ້ນ ແລະ ເຮັດໃຫ້ລາວເປັນຫມາຍສຳຄັນ ແລະ ສຸພາ-
ສິດ, ເພາະເຮົາຈະຕັດລາວອອກເສຍຈາກທ່າມກາງປະຊາຊົນຂອງເຮົາ, ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ.
[9]ຖ້າຜູ້ປະກາດພຣະຄຳຄົນນັ້ນຫລອກລວງ ແລະ ກ່າວຂໍ້ຄວາມໃດໆ, ແລ້ວເຮົາ, ແມ່ນພຣະຢາເວ, ຈະຫລອກລວງຜູ້ປະກາດພຣະທຳຄົນນັ້ນ;
ເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ຄົນນັ້ນ ແລະ ທຳລາຍລ້າງລາວເສຍຈາກທ່າມກາງປະຊາຊົນອິດສະຣາເອນຂອງເຮົາ.[10]ພວກເຂົາຈະຕ້ອງຮັບ-
ໂທດຂອງພວກເຂົາ; ໂທດຂອງຜູ້ປະກາດພຣະທຳກໍເປັນເຊັ່ນດຽວກັບຄົນທີ່ມາປຶກສາລາວ.[11]ດ້ວຍເຫດນີ້ເອງ, ເຊື້ອສາຍອິດສະຣາເອນຈະບໍ່
ຫນີຈາກການຕິດຕາມເຮົາອີກຕໍ່ໄປ ແລະ ບໍ່ເຮັດໃຫ້ຕົນເອງເປັນມົນທິນອີກຕໍ່ໄປດ້ວຍການລະເມີດທັງຫລາຍຂອງພວກເຂົາ. ພວກ-
ເຂົາຈະເປັນປະຊາຊົນຂອງເຮົາ, ແລະ ເຮົາຈະເປັນພຣະເຈົ້າຂອງພວກເຂົາ — ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້."
[12]ແລ້ວພຣະທຳຂອງພຣະເຢວາມາເຖິງຂ້ານ້ອຍ, ກ່າວວ່າ,[13]"ບຸດແຫ່ງມະນຸດເອີຍ, ເມື່ອແຜ່ນດິນຫນຶ່ງເຮັດ
ບາບຕໍ່ສູ້ເຮົາໂດຍການເຮັດຄວາມບາບທີ່ເຮົາໄດ້ຢຽດພຣະຫັດອອກໄປຕໍ່ສູ້ພວກເຂົາ ແລະທຳລາຍແຫລ່ງອາຫານ, ແລະ ສົ່ງການອຶດຫິວມາ
ແລະ ຕັດມະນຸດ ພ້ອມທັງສັດອອກໄປຈາກແຜ່ນດິນເສຍ;[14]ເຖິງແມ່ນວ່າ ມີຊາຍທັງສາມຄົນນີ້ ຄື ໂນອາ, ດານີເອນ, ແລະ ໂຢບ — ຢູ່ໃນ
ທ່າມກາງແຜ່ນດິນນັ້ນ, ພວກເຂົາກໍພຽງແຕ່ສາມາດຊ່ວຍກູ້ເອົາຊີວິດຂອງຕົນລອດພົ້ນອອກມາດ້ວຍຄວາມຊອບທຳຂອງພວກເຂົາເທົ່ານັ້ນ —
ພຣະຢາເວອົງພຣະຜູ້ເປັນເຈົ້າຊົງປະກາດດັ່ງນີ້.
[15]ຖ້າເຮົາສົ່ງສັດຮ້າຍຜ່ານເຂົ້າແຜ່ນດິນ ແລະ ຈະເຮັດໃຫ້ມັນເປັນຫມັນ ເພື່ອວ່າມັນຈະກາຍເປັນບ່ອນຮ້າງເປົ່າ ເພື່ອຈະບໍ່ມີໃຜກາຍເຂົ້າໄປເພາະ
ສັດຮ້າຍນັ້ນ,[16]ເຖິງແມ່ນວ່າ ຊາຍທັງສາມຄົນນັ້ນຢູ່ທີ່ນັ້ນ — ເຮົາມີຊີວິດຢູ່ສັນໃດ — ພຣະຢາເວອົງພຣະຜູ້ເປັນເຈົ້າຊົງປະກາດວ່າ —
ພວກເຂົາທັງຫລາຍຈະບໍ່ສາມາດຊ່ວຍແມ່ນແຕ່ລູກຊາຍຍິງຂອງພວກເຂົາໄດ້;
ພວກເຂົາພຽງສາມາດຊ່ວຍກູ້ເອົາຊີວິດຂອງພວກເຂົາເອງເທົ່ານັ້ນ, ແຕ່ ດິນແດນນັ້ນ ຈະກາຍເປັນບ່ອນຮົກຮ້າງວ່າງເປົ່າເສຍ.
[17]ຫລື ຖ້າເຮົານຳດາບມາຕໍ່ສູ້ແຜ່ນດິນນັ້ນ ແລະ ກ່າວວ່າ, 'ດາບເອີຍ, ຈົ່ງຜ່ານໄປໃນແຜ່ນດິນນັ້ນ ແລະ ຕັດມະນຸດ ແລະ ສັດອອກສາ',[18]ແລ້ວ
ເຖິງວ່າຊາຍທັງສາມຈະຢູ່ທ່າມກາງແຜ່ນດິນນັ້ນສັນໃດ — ເຫມືອນທີ່ເຮົາດຳລົງຢູ່, ພຣະຢາເວອົງພຣະຜູ້ເປັນເຈົ້າຊົງປະກາດວ່າ — ພວກເຂົາກໍ
ຈະບໍ່ສາມາດຊ່ວຍລູກຊາຍຍິງຂອງພວກເຂົາໃຫ້ລອດພົ້ນໄດ້; ພວກເຂົາຈະສາມາດຊ່ວຍກູ້ເອົາຊີວິດຂອງຕົນໃຫ້ລອດພົ້ນໄດ້ເທົ່ານັ້ນ.
[19]ຫລື ຖ້າເຮົາສົ່ງໄພພິບັດເຂົ້າມາຕໍ່ສູ້ແຜ່ນດິນນັ້ນ ແລະ ຖອກເທຄວາມຄຽດຮ້າຍຂອງເຮົາອອກເຫນືອດິນແດນນັ້ນດ້ວຍເລືອດ, ເພື່ອຕັດທັງມະ-
ນຸດ ແລະ ສັດອອກ,[20]ແລ້ວ ເຖິງແມ່ນວ່າ ໂນອາ, ດານີເອນ, ແລະ ໂຢບ ຢູ່ໃນແຜ່ນດິນນັ້ນ — ດັ່ງທີ່ເຮົາຊົງດຳລົງຢູ່, ພຣະຢາເວອົງພຣຜູ້ເປັນເຈົ້າ
ຊົງປະກາດວ່າ — ພວກເຂົາຈະບໍ່ສາມາດຊ່ວຍລູກຊາຍຍິງຂອງພວກເຂົາໃຫ້ລອດພົ້ນໄດ້; ພວກເຂົາພຽງແຕ່ສາມາດຊ່ວຍ
ກູ້ເອົາຊີວິດຂອງຕົນໃຫ້ພົ້ນໄດ້ດ້ວຍຄວາມຊອບທຳຂອງເຂົາເທົ່ານັ້ນ.
[21]ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະເຮັດໃຫ້ສິ່ງຮ້າຍແຮງເກີດຂຶ້ນໂດຍສົ່ງການລົງໂທດທັງສີ່ປະການຂອງເຮົາມາຄື
— ໄພອຶດຫິວ, ດາບ, ສັດຮ້າຍ ແລະ ໂລກລະບາດ ມາຍັງນະຄອນເຢຣູຊາເລັມ ເພື່ອຕັດທັງມະນຸດ ແລະ ສັດອອກຈາກນະຄອນນັ້ນ.
[22]ເບິ່ງແມ໋, ຜູ້ທີ່ຍັງເຫລືອຢູ່ໃນນະຄອນນັ້ນ, ຄືຜູ້ລອດຊີວິດຈະໄປກັບລູກຊາຍ ແລະ ລູກສາວທັງຫລາຍຂອງຕົນ. ເບິ່ງແມ໋! ພວກເຂົາຈະອອກໄປ
ຫາເຈົ້າ, ແລະ ເຈົ້າຈະໄດ້ເຫັນຄວາມປະພຶດ ແລະ ການກະທຳທັງຫລາຍຂອງພວກເຂົາ, ແລະ ເຈົ້າຈະໂລ່ງ
ໃຈຂຶ້ນກັບການລົງໂທດທີ່ເຮົາໄດ້ສົ່ງໄປສູ່ນະຄອນເຢຣູຊາເລັມ ແລະທຸກສິ່ງນອກຈາກນີ້ທີ່ເຮົາສົ່ງໄປສູ່ກັບດິນແດນນີ້.
[23]ຜູ້ລອດຊີວິດຈະເຮັດໃຫ້ພວກເຈົ້າໂລ່ງໃຈຂຶ້ນ ເມື່ອເຈົ້າເຫັນການປະພຶດ ແລະ ການກະທຳທັງຫລາຍຂອງພວກເຂົາ, ດັ່ງນັ້ນ ເຈົ້າຈະຮູ້ວ່າ
ສິ່ງເຫລົ່ານີ້ທີ່ເຮົາໄດ້ເຮັດຕໍ່ສູ້ນະຄອນນັ້ນ, ເຮົາບໍ່ໄດ້ເຮັດໂດຍປາສະຈາກເຫດຜົນ! — ພຣະຢາເວອົງພຣະຜູ້ເປັນເຈົ້າ ຊົງປະກາດດັ່ງນີ້ແຫລະ."

 generated on Tue Jun 17 19:01:42 2025

# 15

[1]ແລ້ວພຣະທຳຂອງພຣະຢາເວກໍມາເຖິງຂ້ານ້ອຍວ່າ, ກ່າວວ່າ[2]“ບຸດແຫ່ງມະນຸດເອີຍ, ເຄືອຕົ້ນອະງຸ່ນກໍດີກວ່າງ່າໄມ້ຢ່າງ
ອື່ນທີ່ຢູ່ທ່າມກາງຕົ້ນໄມ້ທັງຫລາຍໃນປ່າບໍ?[3]ຄົນເອົາໄມ້ຈາກເຄືອຕົ້ນອະງຸ່ນໄປເຮັດຫຍັງບໍ? ຫລື ເອົາໄປເຮັດຂໍຫ້ອຍອັນໃດອັນຫນຶ່ງບໍ?[4]ເບິ່ງແມ໋!
ຫາກມັນຖືກໂຍນລົງໄປໃນກອງໄຟເພື່ອເປັນເຄື່ອງອ່ອຍໄຟ, ແລະ ຖ້າຫາກໄຟນັ້ນໄຫມ້ທັງສອງສົ້ນ ແລະກໍຈະໄຫມ້ທາງກາງນຳ, ມັນຈະໃຊ້ປະ-
ໂຫຍດອັນຫຍັງໄດ້ອີກ?

[5]ເບິ່ງແມ໋! ເມື່ອມັນໄຫມ້ຫມົດແລ້ວ, ມັນກໍບໍ່ສາມາດໃຊ້ປະໂຫຍດຫຍັງໄດ້ອີກ; ແນ່ນອນວ່າ, ເມື່ອຖືກໄຟໄຫມ້ແລ້ວ,
ມັນກໍບໍ່ມີປະໂຫຍດຫຍັງເລີຍ.[6]ສະນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າຈຶ່ງຊົງກ່າວດັ່ງນີ້ວ່າ: ບໍ່ຄືກັບຕົ້ນໄມ້ທີ່ຢູ່ປ່າ, ເຮົາເອົາເຄືອອະງຸ່ນເປັນເຊື້ອໄຟ;
ເຮົາກໍຈະປະຕິບັດຢ່າງດຽວກັນຕໍ່ຜູ້ທີ່ອາໄສ ໃນນະຄອນເຢຣູຊາເລັມສັນນັ້ນ.
[7]ເພາະເຮົາຈະມຸ່ງຫນ້າຂອງເຮົາຕໍ່ສູ້ພວກເຂົາ. ເຖິງວ່າພວກເຂົາອອກຈາກໄຟ, ແຕ່ກອງໄຟກໍຈະເຜົາຜານພວກເຂົາ; ດັ່ງນັ້ນ ເຈົ້າຈະຮູ້ວ່າ ເຮົາ
ແມ່ນພຣະຢາເວ, ເມື່ອເຮົາຕັ້ງຫນ້າຕໍ່ສູ້ພວກເຂົາ.[8]ແລ້ວເຮົາຈະເຮັດໃຫ້ແຜ່ນດິນນັ້ນຖືກຮ້າງເປົ່າ ເພາະພວກເຂົາໄດ້ເຮັດຜິດບາບ —
ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ."

 generated on Tue Jun 17 19:01:42 2025

16 [1]ແລ້ວພຣະທຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດແຫ່ງມະນຸດເອີຍ, ຈົ່ງແຈ້ງຕໍ່ນະຄອນເຢຣູຊາເລັມກ່ຽວກັບ
ການກະທຳອັນຫນ້າກຽດຫນ້າຊັງຂອງຕົນ,[3]ແລະຈົ່ງປະກາດວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວຢ່າງນີ້ແກ່ນະຄອນເຢຣູຊາເລັມ
ວ່າ: ການເລີ່ມຕົ້ນ ແລະ ການເກີດຂອງເຈົ້າ ກໍໄດ້ເກີດຂຶ້ນທີ່ແຜ່ນດິນຄົນການາອານ; ພໍ່ຂອງເຈົ້າເປັນຄົນອາໂມຣິດ, ແລະ ແມ່ຂອງເຈົ້າເປັນຄົນ
ຮິດຕີ.

[4]ໃນວັນທີ່ເຈົ້າເກີດນັ້ນ, ແມ່ຂອງເຈົ້າບໍ່ໄດ້ຕັດສາຍແຫ່ ແລະ ສາຍບືຂອງເຈົ້າ, ນາງກໍບໍ່ໄດ້ໃຊ້ນໍ້າອາບ ຫລື ຖູໂຕເຈົ້າໃຫ້ສະອາດດ້ວຍເກືອ, ຫລື
ເອົາຜ້າພັນເຈົ້າໄວ້.[5]ບໍ່ມີຕາຈັກຫນ່ວຍທີ່ມີຄວາມອີຕູເຈົ້າ ເພື່ອຈະເຮັດສິ່ງເຫລົ່ານີ້ໃຫ້ເຈົ້າ, ເພື່ອສະແດງຄວາມເມດຕາຕໍ່ເຈົ້າ. ໃນວັນທີ່ເຈົ້າເກີດ,
ຊີວິດຂອງເຈົ້າກໍເປັນທີ່ຫນ້າກຽດຊັງ, ເຈົ້າໄດ້ຖືກປະຖິ້ມໄວ້ໃນທົ່ງນາ.
[6]ແຕ່ເຮົາໄດ້ຜ່ານມາໃກ້ເຈົ້າ, ແລະ ເຮົາໄດ້ເຫັນເຈົ້ານອນເກືອກຢູ່ໃນກອງເລືອດຂອງຕົນ; ດັ່ງນັ້ນ ເຮົາກໍໄດ້ເວົ້າກັບເຈົ້າໃນກອງເລືອດຂອງເຈົ້າວ່າ,
"ຈົ່ງມີຊີວິດຢູ່!" ເຮົາກໍໄດ້ເວົ້າກັບເຈົ້າໃນກອງເລືອດຂອງເຈົ້າວ່າ, "ຈົ່ງມີຊີວິດຢູ່!"[7]ເຮົາໄດ້ເຮັດໃຫ້ເຈົ້າເຕີບໂຕເຫມືອນຢ່າງພືດໃນທົ່ງນາ. ເຈົ້າ
ຈະເພີ່ມທະວີ ແລະ ກາຍເປັນຜູ້ຍິງໃຫຍ່, ເຈົ້າເປັນເພັດພອຍແຫ່ງເພັດພອຍທັງຫລາຍ. ຫນ້າເອິກຂອງເຈົ້າກໍມີຮູບຊົງງາມດີ ແລະ ຜົມຂອງເຈົ້າກໍ
ດົກຫນາ, ເຖິງວ່າເຈົ້າເຄີຍເປືອຍກາຍ ແລະ ປະໂຕຢູ່.
[8]ເຮົາໄດ້ຜ່ານເຈົ້າໄປອີກເທື່ອ, ແລະ ໄດ້ເຫັນເຈົ້າ. ເບິ່ງແມ້! ເວລາແຫ່ງຄວາມຮັກກໍມາຮອດເຈົ້າແລ້ວ, ດັ່ງນັ້ນ ເຮົາຈຶ່ງໄດ້ພືເສື້ອ-
ຄຸມຂອງເຮົາເຫນືອເຈົ້າ ແລະ ປົກປິດຄວາມເປືອຍກາຍຂອງເຈົ້າໄວ້. ແລ້ວເຮົາໄດ້ໃຫ້ຄຳປະຕິຍານຕໍ່ເຈົ້າ ແລະ ເຮັດຄຳຫມັ້ນສັນຍາກັບເຈົ້າ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ແລະ ເຈົ້າກໍເປັນກຳມະສິດຂອງເຮົາ.
[9]ດັ່ງນັ້ນ ເຮົາໄດ້ອາບນໍ້າໃຫ້ເຈົ້າ ແລະ ໄດ້ລ້າງເລືອດອອກຈາກເຈົ້າ, ແລະ ເອົານໍ້າມັນຊະໂລມເຈົ້າ.[10]ເຮົາໄດ້ແຕ່ງຕົວໃຫ້ເຈົ້າດ້ວຍຜ້າຖັກແສ່ວ
ແລະ ເອົາເກີບຫນັງສຸບໃສ່ຕີນຂອງເຈົ້າ. ເຮົາພັນເຈົ້າໄວ້ດ້ວຍຜ້າປ່ານເນື້ອລະອຽດ ແລະ ຄຸມເຈົ້າໄວ້ດ້ວຍຜ້າໄຫມ.[11]ຕໍ່ມາ
ເຮົາເອົາເຄື່ອງປະດັບມາປະດັບເຈົ້າ, ເອົາປອກແຂນມາສູບໃສ່ແຂນໃຫ້ເຈົ້າ, ແລະ ໃສ່ສາຍຄໍໃຫ້ເຈົ້າ.[12]ເຮົາເອົາບ້ວງມາໃສ່ດັງຂອງເຈົ້າ, ແລະ
ໃສ່ຕຸ້ມຫູໃຫ້ເຈົ້າ, ແລະ ສຸບມົງກຸດງາມໄວ້ເທິງຫົວຂອງເຈົ້າ.
[13]ດັ່ງນັ້ນ ເຈົ້າຖືກປະດັບຕົນດ້ວຍຄຳ ແລະ ເງິນ, ແລະ ເຈົ້າໄດ້ນຸ່ງເຄື່ອງດ້ວຍຜ້າປ່ານເນື້ອລະອຽດ, ຜ້າໄຫມ, ແລະ ຜ້າຖັກແສ່ວ; ເຈົ້າກິນຍອດ
ແປ້ງ, ນໍ້າເຜິ້ງ ແລະ ນໍ້າມັນຫມາກກອກ, ແລະ ເຈົ້າໄດ້ກາຍເປັນຄົນງາມຫລາຍ, ແລະ ເຈົ້າໄດ້ກາຍເປັນພະຣາຊິນີ.[14]ຊື່ສຽງຂອງເຈົ້າກໍຖືກຊ່າລື
ໄປໃນທ່າມກາງປະຊາຊາດທັງຫລາຍ ເພາະຄວາມງົດງາມຂອງເຈົ້າ, ຍ້ອນມັນເປັນສິ່ງທີ່ສົມບູນແບບໃນຄວາມສະຫງ່າງາມທີ່ເຮົາໄດ້ມອບໄວ້
ໃຫ້ແກ່ເຈົ້າ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
[15]ແຕ່ເຈົ້າວາງໃຈໃນຄວາມງາມຂອງຕົນເອງ, ແລະ ເຈົ້າໄດ້ປະຕິພຶດຕົນເຫມືອນຍິງໂສເພນີ ຍ້ອນຊື່ສຽງຂອງເຈົ້າ;
ເຈົ້າໄດ້ປະພຶດຢ່າງຍິງໂສເພນີຕໍ່ທຸກຄົນທີ່ຜ່ານໄປເຂົ້າມາ, ເພື່ອຄວາມງາມຂອງເຈົ້າຈະກາຍເປັນຂອງເຂົາ.[16]ແລ້ວເຈົ້າເອົາເສື້ອຜ້າຂອງເຈົ້າ ແລະ
ເອົາມັນມາສ້າງເປັນສະຖານທີ່ສູງສວຍງາມດ້ວຍຫລາກຫລາຍສີສັນສຳລັບຕົນ, ແລະ ຢູ່ບ່ອນນັ້ນ ເຈົ້າໄດ້ປະພຶດຕົນເຫມືອນຢ່າງຍິງໂສເພນີ.
ສິ່ງຫນ້າກຽດຫນ້າຊັງເຫລົ່ານີ້ ບໍ່ຄວນເກີດຂຶ້ນ ແລະ ບໍ່ຫນ້າຈະມີຢູ່ເລີຍ.
[17]ເຈົ້າໄດ້ເອົາເພັດນິນຈິນດາຊັ້ນເຄື່ອງປະດັບຊັ້ນເລີດຂອງ ຄຳ ແລະ ເງິນ ທີ່ເຮົາໄດ້ມອບໃຫ້ແກ່ເຈົ້າ, ແລ້ວເຈົ້າໄດ້ສ້າງຈຳນວນຜູ້ຊາຍສຳລັບ
ຕົນເອງ, ແລະ ເຈົ້າປະຕິບັດກັບພວກເຂົາເຫມືອນຢ່າງທີ່ຍິງໂສເພນີໄດ້ເຮັດ.[18]ເຈົ້າເອົາເຄື່ອງນຸ່ງຫົ່ມທີ່ຖັກແສ່ວ ແລະ ປົກປິດໄວ້, ແລະ ເຈົ້າໄດ້ເອົາ
ນໍ້າມັນ ແລະ ນໍ້າຫອມຂອງເຮົາໄວ້ຕໍ່ຫນ້າພວກເຂົາ.[19]ເຂົ້າຈີ່ທີ່ເຮົາໃຫ້ແກ່ເຈົ້າ — ເຮັດດ້ວຍແປ້ງຢ່າງດີ, ນໍ້າມັນ ແລະ ນໍ້າເຜິ້ງ — ເຈົ້າກໍເອົາມາ
ວາງຕໍ່ຫນ້າພວກເຂົາ ເພື່ອໃຫ້ເປັນກິ່ນຫອມທີ່ພໍໃຈ, ນີ້ເປັນສິ່ງທີ່ເກີດຂຶ້ນແລ້ວ—ນີ້ເປັນຄຳປະກາດຂອງພຣຢາເວ ອົງພຣະຜູ້ເປັນເຈົ້າ.
[20]ແລ້ວເຈົ້າໄດ້ຈັບລູກຊາຍ ແລະ ລູກສາວຂອງເຈົ້າ ຜູ້ຊຶ່ງເກີດມາເພື່ອເຮົາ, ແລະ ເຈົ້າໄດ້ຖວາຍບູຊາພວກເຂົາ
ເພື່ອເປັນອາຫານແກ່ຮູບເຄົາລົບຕ່າງໆ. ການທີ່ເຈົ້າປະພຶດຕົນນັ້ນເຫມືອນຍິງໂສເພນີເປັນເລື່ອງເລັກນ້ອຍຫລື?[21]ເຈົ້າໄດ້ຂ້າລູກຂອງເຮົາ ແລະ
ໄດ້ເຜົາພວກເຂົາໃນກອງໄຟ.[22]ຕະຫລອດການກະທຳອັນຫນ້າກຽດຫນ້າຊັງຂອງເຈົ້າ ແລະ ການກະທຳຂອງຍິງໂສເພນີຂອງເຈົ້າ ເຈົ້າບໍ່-
ໄດ້ຄິດເຖິງວັນເວລາທີ່ເຈົ້າຍັງນ້ອຍ, ຕອນທີ່ເຈົ້າຍັງເປືອຍກາຍ ແລະ ບໍ່ມີເຄື່ອງນຸ່ງຫົ່ມ ນອນເກືອກຢູ່ໃນກອງເລືອດຂອງຕົນ.
[23]ວິບັດ! ວິບັດແກ່ເຈົ້າ! — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ — ສະນັ້ນ, ນອກເຫນືອຈາກຄວາມຊົ່ວຮ້າຍທັງຫມົດຂອງ
ເຈົ້າແລ້ວ,[24]ເຈົ້າຍັງໄດ້ສ້າງຫ້ອງຫລັງຄາສຳລັບຕົນໃນສະຖານທີ່ສາທາລະນະທຸກແຫ່ງ.
[25]ເຈົ້າໄດ້ສ້າງສະຖານທີ່ສູງຂອງເຈົ້າໄວ້ທີ່ຫົວຖະຫນົນທຸກເສັ້ນ ແລະ ເຮັດໃຫ້ຄວາມງາມຂອງເຈົ້າລົດຄຸນຄ່າລົງ, ເພາະເຈົ້າໄດ້ມອບຮ່າງກາຍ
ຂອງເຈົ້າໃຫ້ກັບທຸກຄົນທີ່ຜ່ານໄປມາດ້ວຍການກະທຳທັງຫລາຍຂອງຍິງໂສເພນີ.[26]ເຈົ້າເຮັດຕົນຄືຍິງໂສເພນີກັບຄົນເອຢິບ, ເພື່ອນບ້ານຜູ້
ທີ່ເຕັມໄປດ້ວຍຕັນຫາຂອງເຈົ້າ, ແລະ ເຈົ້າໄດ້ເຮັດກິດຈະການທັງຫລາຍຂອງຍິງໂສເພນີ, ຊຶ່ງເປັນເຫດໃຫ້ຄວາມໂກດຮ້າຍຂອງເຮົາເພີ່ມຂຶ້ນ.
[27]ເບິ່ງແມ້! ເຮົາຈະຕີເຈົ້າດ້ວຍມືຂອງເຮົາ ແລະ ຕັດອາຫານຂອງເຈົ້າ. ເຮົາຈະມອບຊີວິດຂອງເຈົ້າໃຫ້ແກ່ສັດຕູຂອງເຈົ້າ, ຄືບັນດາລູກສາວຄົນຟີ-
ລິດສະຕິນ, ຜູ້ຊຶ່ງລະອາຍໃນການປະພຶດອັນຊົ່ວຮ້າຍຂອງເຈົ້າ.[28]ເຈົ້າເຮັດຕົນຄືໂສເພນີກັບຄົນອັດຊີເຣຍດ້ວຍ ເພາະວ່າເຈົ້າບໍ່ຮູ້ຈັກອີ່ມ. ແລະ
ເຈົ້າເຮັດຕົນຄືໂສເພນີ ແຕ່ເຖິງປານນັ້ນເຈົ້າກໍຍັງບໍ່ຮູ້ຈັກອີ່ມ.[29]ເຈົ້າຍັງເພີ່ມທະວີການກະທຳຂອງຍິງໂສເພນີໃນແຜ່ນດິນພໍ່ຄ້າຊາວບາບີໂລນ, ແລະ
ເຖິງປານນັ້ນກໍຕາມ ເຈົ້າຍັງບໍ່ຮູ້ສຶກອີ່ມຫນຳສຳລານໃຈ.
[30]ເປັນຫຍັງຈິດໃຈຂອງເຈົ້າຈຶ່ງບໍ່ສະບາຍປານນີ້ — ນີ້ເປັນການປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ຊຶ່ງເຈົ້າໄດ້ເຮັດສິ່ງຕ່າງໆເຫລົ່ານີ້,
ເຮັດຕົນເປັນໂສເພນີທີ່ບໍ່ຮູ້ອາຍຢ່າງນີ້ຫລື?[31]ເຈົ້າໄດ້ສ້າງສະຖານທີ່ສູງໄວ້ໃນຖະຫນົນທຸກເສັ້ນ ແລະ ສ້າງຫ້ອງພັກໄວ້
ໃນສະຖານທີ່ສາທາລະນະທຸກແຫ່ງ. ເຖິງປານນັ້ນ ເຈົ້າກໍຍັງບໍ່ເຫມືອນກັບຍິງໂສເພນີ ເພາະເຈົ້າປະຕິເສດຄ່າຈ້າງ.
[32]ເຈົ້າເປັນຍິງຫລິ້ນຊູ້, ເຈົ້າຮັບຄົນແປກຫນ້າແທນຜົວຂອງຕົນ.[33]ຄົນທັງຫລາຍເອົາຄ່າຈ້າງໃຫ້ໂສເພນີທຸກຄົນ,
ແຕ່ເຈົ້າເອົາຄ່າຈ້າງໃຫ້ແກ່ຄົນຮັກທັງປວງຂອງເຈົ້າ ແລະໃຫ້ສິນບົນໃຫ້ມາຫາເຈົ້າຈາກທຸກຫົນທຸກແຫ່ງ
ເພື່ອການກະທຳຢ່າງຍິງໂສເພນີຂອງເຈົ້າ.[34]ສະນັ້ນ ນີ້ຄືຄວາມແຕກຕ່າງລະຫວ່າງເຈົ້າກັບຜູ້ຍິງເຫລົ່ານັ້ນ,
ເພາະວ່າບໍ່ມີໃຜໄປຫາເຈົ້າເພື່ອຂໍໃຫ້ເຈົ້າໄປນອນກັບພວກເຂົາ. ແຕ່ເຈົ້າຍອມຈ່າຍຄ່າຈ້າງໃຫ້ພວກເຂົາແທນ, ບໍ່ມີໃຜຈ່າຍໃຫ້ເຈົ້າ.
[35]ສະນັ້ນ, ເຈົ້າ ຍິງໂສເພນີເອີຍ, ຈົ່ງຟັງພຣະຄຳຂອງພຣະຢາເວ.[36]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະວ່າເຈົ້າໂປຍສະເຫນ່
ແລະ ເປືອຍກາຍຂອງເຈົ້າອອກໃນການປະພຶດຂອງຍິງໂສເພນີກັບຄົນຮັກທັງຫລາຍຂອງເຈົ້າ ແລະ ກັບຮູບເຄົາລົບອັນຫນ້າກຽດຫນ້າ-

ຊັງທັງຫລາຍຂອງເຈົ້າ, ແລະ ເພາະເລືອດລູກທັງຫລາຍຂອງເຈົ້າທີ່ເຈົ້າມອບໃຫ້ແກ່ຮູບເຄົາລົບເຫລົ່ານັ້ນຂອງເຈົ້າ.37ສະນັ້ນ, ເບິ່ງແມ້! ເຮົາຈະ
ຮວບຮວມຄົນຮັກທັງຫລາຍຂອງເຈົ້າທີ່ເຈົ້າໄດ້ພົບ, ລວມທັງຄົນທັງຫລາຍທີ່ເຈົ້າຮັກ ແລະ ເຈົ້າຊັງ, ເຮົາຈະຮວບຮວມພວກ-
ເຂົາທັງຫລາຍມາຕໍ່ສູ້ເຈົ້າຈາກທຸກດ້ານ. ແລະ ເຮົາຈະເປືອຍກາຍຂອງເຈົ້າຕໍ່ຫນ້າພວກເຂົາ ເພື່ອພວກເຂົາຈະໄດ້ເຫັນການເປືອຍກາຍທັງຫມົດ
ຂອງເຈົ້າ.
38ເພື່ອເຮົາຈະພິພາກສາລົງໂທດເຈົ້າໃນຖານະຜູ້ຫລິ້ນຊູ້  ແລະ ເຮັດໃຫ້ຫລັ່ງເລືອດ,  ແລະ ເຮົາຈະນໍາເລືອດແຫ່ງຄວາມຄຽດຮ້າຍ ແລະ ຄວາມ
ຫຶງຫວງຂອງເຮົາມາເຫນືອເຈົ້າ.39ເຮົາຈະມອບເຈົ້າໄວ້ໃນມືຂອງພວກເຂົາ ດັ່ງນັ້ນພວກເຂົາຈະທໍາລາຍຫ້ອງຫລັງຄາໂຄ້ງຂອງເຈົ້າລົງ ແລະ ຈະ
ທໍາລາຍສະຖານທີ່ສູງທັງຫລາຍຂອງເຈົ້າ ແລະ ພວກເຂົາຈະຈີກເສື້ອຜ້າຂອງເຈົ້າອອກແລະ ເອົາເຄື່ອງປະດັບທັງຫມົດຂອງເຈົ້າໄປເສຍ.
ພວກເຂົາຈະປະຖິ້ມເຈົ້າໃຫ້ເປືອຍກາຍ ແລະ ບໍ່ມີເຄື່ອງນຸ່ງຫົ່ມ.
40ແລ້ວພວກເຂົາຈະນໍາຝູງຄົນມາຕໍ່ສູ້ກັບເຈົ້າ ແລະ ແກວ່ງກ້ອນຫີນໃສ່ເຈົ້າ, ແລະ ພວກເຂົາຈະຕັດເຈົ້າດ້ວຍດາບຂອງເຂົາເປັນທ່ອນໆ.41ພວກ-
ເຂົາຈະເອົາໄຟເຜົາບ້ານເຮືອນທັງຫລາຍຂອງເຈົ້າ ແລະ ຈະເຮັດຫລາຍສິ່ງໃນການພິພາກສາລົງໂທດເຈົ້າຕໍ່ຫນ້າພວກຜູ້ຍິງທັງຫລາຍ, ເພື່ອເຮົາ
ຈະເຮັດໃຫ້ເຈົ້າຢຸດການເປັນໂສເພນີຂອງເຈົ້າ, ແລະ ເຈົ້າຈະບໍ່ຈ່າຍຄ່າຈ້າງໃຫ້ບັນດາຄົນຮັກທັງຫລາຍຂອງເຈົ້າອີກຕໍ່ໄປ.42ແລ້ວການຕໍ່ສູ້ຂອງ
ເຮົາທີ່ມີຕໍ່ເຈົ້າກໍຈະສະຫງົບລົງ; ຄວາມຄຽດຮ້າຍຂອງເຮົາກໍຈະໄປຈາກເຈົ້າ, ເພາະເຮົາເພິ່ງພໍໃຈ, ແລະ ຈະບໍ່ຄຽດຮ້າຍອີກຕໍ່ໄປ.
43ເພາະວ່າເຈົ້າບໍ່ໄດ້ລະນຶກເຖິງໃນເວລາທີ່ເຈົ້າຍັງນ້ອຍ ແລະເຈົ້າເຮັດໃຫ້ເຮົາສັ່ນສະເທືອນດ້ວຍຄວາມຄຽດຮ້າຍ ເພາະສິ່ງເຫລົ່ານີ້, ດັ່ງນັ້ນ,
ເບິ່ງແມ້! ເຮົາເອງຈະລົງໂທດໃນສິ່ງທີ່ເຈົ້າໄດ້ເຮັດໃຫ້ຕົກເທິງຫົວຂອງເຈົ້າ — ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
ເຈົ້າຍັງບໍ່ໄດ້ເພີ່ມການລ່ວງປະເວນີກັບການປະພຶດຕົນທີ່ຫນ້າລັງກຽດອື່ນໆທັງຫມົດຂອງເຈົ້າຫລືບໍ?
44ເບິ່ງແມ້! ທຸກຄົນທີ່ກ່າວຄໍາສຸພາສິດຈະກ່າວເຖິງເຈົ້າວ່າ, "ແມ່ເປັນຢ່າງໃດ, ລູກສາວກໍເປັນຢ່າງນັ້ນ."45ເຈົ້າເປັນລູກສາວຂອງແມ່ເຈົ້າ, ຜູ້ກຽດ-
ຊັງຜົວກັບລູກໆຂອງຕົນ, ແລະ ເຈົ້າເປັນນ້ອງສາວຂອງເອື້ອຍເຈົ້າ ຜູ້ກຽດຊັງຜົວກັບລູກໆຂອນາງ. ແມ່ຂອງເຈົ້າເປັນຄົນຮິດຕີ, ແລະ ພໍ່ຂອງເຈົ້າ
ເປັນຄົນອາໂມຣິດ
46ເອື້ອຍຂອງເຈົ້າຄືຊາມາເຣຍ ແລະ ລູກສາວທັງຫລາຍຂອງນາງຊຶ່ງອາໄສຢູ່ທາງເຫນືອ, ໃນຂະນະນ້ອງສາວຂອງເຈົ້າ ຜູ້ຊຶ່ງອາໄສຢູ່ທາງໃຕ້, ຄື
ໂຊໂດມ ແລະ ລູກສາວທັງຫລາຍຂອງນາງ.
47ເຈົ້າບໍ່ພຽງແຕ່ດໍາເນີນໃນວິຖີທາງອັນຊົ່ວຮ້າຍຂອງພວກເຂົາ ແລະ ເຈົ້າຍັງຮຽນແບບນິໄສ ແລະ ການກະທໍາຂອງເຂົາ, ແຕ່
ວິຖີທັງຫມົດຂອງເຈົ້າກໍຍິ່ງຊົ່ວຊ້າຫລາຍກວ່າພວກເຂົາເສຍອີກ.48ເຮົາມີຊີວິດຢູ່ສັນໃດ — ນີ້ເປັນຄໍາປະກາດຂອງພຣະເຢວາອົງພຣະຜູ້ເປັນເຈົ້າ
— ໂຊໂດມນ້ອງສາວຂອງເຈົ້າກັບລູກສາວທັງຫລາຍຂອງນາງ, ກໍບໍ່ໄດ້ເຮັດການຊົ່ວຫລາຍເຫມືອນທີ່ເຈົ້າ ກັບລູກສາວຂອງເຈົ້າໄດ້ເຮັດແລ້ວນັ້ນ.
49ເບິ່ງແມ້! ນີ້ແຫລະເປັນຄວາມຊົ່ວຊ້າຂອງໂຊໂດມນ້ອງສາວຂອງເຈົ້າ: ນາງໄດ້ໂອ້ອວດໃນເວລາຫວ່າງຂອງນາງ, ບໍ່ເອົາໃຈໃສ່, ແລະ
ບໍ່ມີເລື່ອງທຸກຮ້ອນຫຍັງເລີຍ. ນາງບໍ່ມີແຮງໃນການໃຫ້ຊ່ວຍເຫລືອພວກຄົນທຸກຍາກ ແລະ ຄົນຂັດສົນເລີຍ.50ນາງຈອງຫອງ ແລະ ເຮັດສິ່ງຫນ້າ
ກຽດຊັງຕໍ່ຫນ້າເຮົາ, ສະນັ້ນ ເຮົາຈຶ່ງຈັດການກັບພວກເຂົາໄປຕາມທີ່ເຈົ້າເຫັນນັ້ນ.
51ຊາມາເຣຍກໍເຫມືອນກັນ ເຮັດບາບບໍ່ໄດ້ເຖິງເຄິ່ງຫນຶ່ງຂອງບາບເຈົ້າ; ແຕ່ທາງກົງກັນຂ້າມ, ເຈົ້າໄດ້ເຮັດສິ່ງທີ່ຫນ້າກຽດຊັງຫລາຍກວ່າພວກ-
ເຂົາໄດ້ເຮັດອີກ, ແລະ ເຈົ້າໄດ້ສະແດງໃຫ້ເຫັນວ່າເອື້ອຍນ້ອງຂອງເຈົ້າດີກວ່າເຈົ້າ ເພາະຄວາມກຽດຊັງທັງຫມົດທີ່ເຈົ້າໄດ້ເຮັດ.
52ໂດຍສະເພາະເຈົ້າ, ໄດ້ສະແດງຄວາມອັບອາຍຂາຍຫນ້າຂອງເຈົ້າ; ດ້ວຍຢ່າງນີ້ ເຈົ້າໄດ້ເຮັດໃຫ້ເຫັນວ່າເອື້ອຍນ້ອງຂອງເຈົ້າດີກວ່າເຈົ້າ,
ເນື່ອງຈາກບາບທັງຫມົດຂອງເຈົ້າ ທີ່ເຈົ້າໄດ້ເຮັດທັງຫມົດນັ້ນເປັນສິ່ງຫນ້າລັງກຽດ. ເບິ່ງຄືວ່າ ເອື້ອຍນ້ອງຂອງເຈົ້າດີກວ່າເຈົ້າ. ໂດຍສະເພາະ
ເຈົ້າ, ໄດ້ສະແດງຄວາມອັບອາຍຂາຍຫນ້າຂອງເຈົ້າ. ດ້ວຍຢ່າງນີ້ ເຈົ້າໄດ້ເຮັດໃຫ້ເຫັນວ່າ ເອື້ອຍນ້ອງຂອງເຈົ້າດີກວ່າເຈົ້າ.
53ເພື່ອເຮົາຈະຟື້ນຄືນອະນາຄົດໃຫ້ແກ່ພວກເຂົາ — ອະນາຄົດຂອງໂຊໂດມ ແລະ ບັນດາລູກສາວຂອງນາງ ແລະ ອະນາຄົດຂອງຊາມາເຣຍ
ແລະ ບັນດາລູກສາວຂອງນາງ; ແຕ່ອະນາຄົດຂອງເຈົ້າຈະຢູ່ທ່າມກາງພວກເຂົາດ້ວຍ.54ດ້ວຍເລື່ອງເຫລົ່ານີ້ ເຈົ້າຈະສະແດງຄວາມອັບອາຍຂາຍ-
ຫນ້າຂອງຕົນ; ເຈົ້າຈະໄດ້ຮັບອັບອາຍ ຍ້ອນສິ່ງທັງປວງທີ່ພວກເຈົ້າໄດ້ເຮັດ, ແລະດ້ວຍວິທີນີ້ ເຈົ້າຈະເຮັດໃຫ້ພວກເຂົານັ້ນຮູ້ສຶກດີຂຶ້ນ.55ດັ່ງນັ້ນ
ສ່ວນເອື້ອຍ ແລະ ລູກສາວຂອງໂຊໂດມ ຈະໄດ້ຮັບການຟື້ນຄືນສູ່ສະພາບເດີມ, ແລະ ຊາມາເຣຍ ກັບລູກສາວຂອງນາງຈະຖືກຟື້ນຄືນສູ່ສະພາບ
ເດີມຂອງເຂົາ. ສ່ວນເຈົ້າ ແລະ ລູກສາວຂອງເຈົ້າຈະຖືກຟື້ນຄືນໃຫ້ກັບຄືນສູ່ສະພາບເດີມດ້ວຍ.
56ໂຊໂດມ ເຈົ້າບໍ່ໄດ້ເອີ່ຍເຖິງນ້ອງສາວຂອງເຈົ້າໃນວັນແຫ່ງຄວາມຈອງຫອງຂອງເຈົ້າ,57ກ່ອນຫນ້າຄວາມຊົ່ວຮ້າຍຂອງເຈົ້າຈະໄດ້ເປີດເຜີຍ.
ແຕ່ຕອນນີ້ ເຈົ້າກໍເປັນຜູ້ທີ່ຖືກຫມິ່ນປະຫມາດໂດຍລູກສາວທັງຫລາຍແຫ່ງເອໂດມ ແລະ ລູກສາວທັງຫລາຍຂອງຄົນຟີລິດສະຕິນຜູ້ທີ່ຢູ່ອ້ອມ-
ຮອບ. ປະຊາຊົນທັງຫມົດກໍຫມິ່ນປະຫມາດເຈົ້າ.58ເຈົ້າຈະສະແດງຄວາມອັບອາຍ ແລະ ການກະທໍາທີ່ຫນ້າກຽດຊັງຂອງເຈົ້າ! —
ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ!
59ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະຈັດການກັບເຈົ້າຢ່າງສະສົມ, ເຈົ້າ ຜູ້ຫມິ່ນປະຫມາດຄໍາສາບານຂອງເຮົາ
ດ້ວຍການລະເມີດພັນທະສັນຍາ.
60ແຕ່ເຮົາຈະລະນຶກເຖິງພັນທະສັນຍາທີ່ເຮົາໃຫ້ໄວ້ກັບເຈົ້າ ໃນສະໄຫມທີ່ເຈົ້າຍັງເປັນຫນຸ່ມຢູ່, ແລະ ເຮົາຈະສະຖາປະນາພັນທະສັນຍານິລັນ-
ດອນໄວ້ກັບເຈົ້າ.61ແລ້ວເຈົ້າຈະລະນຶກເຖິງທາງທັງຫລາຍຂອງເຈົ້າ ແລະ ຖືກອັບອາຍ ເມື່ອເຈົ້າຮັບເອົາເອື້ອຍ ແລະ ນ້ອງທັງຫລາຍຂອງເຈົ້າ. ເຮົາ
ຈະມອບພວກເຂົາໃຫ້ເປັນລູກສາວຂອງເຈົ້າ, ແຕ່ບໍ່ແມ່ນຍ້ອນພັນທະສັນຍາຊຶ່ງເຮົາໃຫ້ໄວ້ກັບເຈົ້າ.
62ເຮົາຈະສະຖາປະນາພັນທະສັນຍາຂອງເຮົາໄວ້ກັບເຈົ້າ, ແລະ ເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວ.63ເພາະທຸກສິ່ງທີ່ເຈົ້າເຮັດລົງໄປ,
ເຈົ້າຈະລະນຶກເຖິງທຸກຢ່າງ ແລະ ລະອາຍໃຈ, ດັ່ງນັ້ນ ເຈົ້າຈະບໍ່ອ້າປາກເວົ້າອີກຕໍ່ໄປ ເນື່ອງຈາກຄວາມລະອາຍໃຈຂອງເຈົ້າ, ເມື່ອ
ເຮົາຍົກໂທດໃຫ້ເຈົ້າສໍາລັບທຸກສິ່ງທຸກຢ່າງທີ່ເຈົ້າໄດ້ເຮັດນັ້ນ — ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'"


generated on Tue Jun 17 19:01:42 2025

# 17

[1]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດແຫ່ງມະນຸດເອີຍ, ຈົ່ງຍົກຄຳປິດສະໜາ ແລະ ກ່າວຄຳອຸປະມາແກ່ເຊື້ອສາຍ
ອິດສະຣາເອນ.[3]ໃຫ້ກ່າວວ່າ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ມີນົກອິນຊີໃຫຍ່ໂຕໜຶ່ງ ມີປີກໃຫຍ່ ແລະ ຂົນປີກກໍຍາວ, ທັງມີ
ຂົນຫລາຍ ແລະ ມີຫລາຍສີ ໄດ້ ໄປຍັງເລບານອນ ແລະ ຈັບເທິງຍອດຕົ້ນແປກ.[4]ມັນໄດ້ເດັດຍອດກິ່ງອ່ອນ ແລະ
ກໍໄດ້ຄາບໄປຍັງແຜ່ນດິນແຫ່ງການາອານ; ແລະ ມັນໄດ້ປູກໃນເມືອງຂອງພໍ່ຄ້າທັງຫລາຍ.

[5]ແລ້ວມັນກໍເອົາເມັດພືດແຫ່ງແຜ່ນດິນ ແລະ ໄດ້ປູກໄວ້ໃນບ່ອນດິນອຸດົມສົມບູນ. ມັນປະເມັດພືດໄວ້ແຄມສາຍນ້ຳໃຫຍ່ ເໝືອນກັບຕົ້ນໄຄ້ນ້ຳ.
[6]ແລ້ວເມັດພືດໄດ້ງອກຂຶ້ນມາ ແລະ ໄດ້ເຕີບໃຫຍ່ຂຶ້ນເປັນເຄືອອະງຸ່ນເລືອໃນດິນ. ກິ່ງກ້ານທັງຫລາຍຂອງມັນກໍລາມໄປຫາມັນ, ແລະ
ຮາກຂອງມັນກໍຢັ່ງລົງລຸ່ມ. ດັ່ງນັ້ນເມັດພືດ ໄດ້ກາຍເປັນເຄືອອະງຸ່ນ ແລະ ມັນໄດ້ແຕກກິ່ງກ້ານທັງຫລາຍ ແລະ ໄດ້ແຕກໜໍ່ທັງຫລາຍ.
[7]ແຕ່ວ່າ ມີນົກອິນຊີໂຕໃຫຍ່ອີກໂຕໜຶ່ງ, ມີປີກໃຫຍ່ ແລະ ມີຂົນຫລາຍ. ເບິ່ງແມ່! ເຄືອອະງຸ່ນເຄືອນີ້ ໄດ້ຢັ່ງຮາກມາທາງນົກອິນຊີ, ແລະ ໄດ້ແຕກ
ກິ່ງກ້ານມາທາງນົກໂຕນີ້ຈາກບ່ອນທີ່ໄດ້ປູກຢູ່ນັ້ນ ເພື່ອຈະຖືກຫົດນ້ຳ.[8]ມັນໄດ້ຖືກປູກໄວ້ໃນບ່ອນດິນດີໃກ້ສະນ້ຳໃຫຍ່ ເພື່ອໃຫ້ແຕກກິ່ງກ້ານ ແລະ
ອອກຜົນ, ແລະ ກາຍເປັນເຄືອອະງຸ່ນທີ່ດີເລີດ.'
[9]ຈົ່ງກ່າວກັບປະຊາຊົນວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຄືອນັ້ນຈະເລີນຂຶ້ນໄດ້ບໍ? ມັນຈະບໍ່ຖືກຖອນຮາກ ແລະ
ຜົນຂອງງມັນຈະບໍ່ຖືກເດັດຫລື, ແລ້ວເຄືອຂອງມັນຈະຫ່ຽວແຫ້ງ, ແລະ ທຸກສ່ວນທີ່ງອກໃຫມ່ຂອງມັນຈະຫ່ຽວແຫງຢ່າງນັ້ນບໍ?
ບໍ່ຈຳເປັນຕ້ອງໃຊ້ແຂນທີ່ມີແຮງ ຫລື ຄົນຈຳນວນຫລາຍ ເພື່ອຖອນຮາກຂອງມັນ.[10]ດັ່ງນັ້ນ ເບິ່ງແມ່! ຫລັງຈາກທີ່ມັນຖືກປູກ, ມັນຈະງອກງາມບໍ?
ມັນຈະບໍ່ຫ່ຽວແຫ່ງເມື່ອຖືກລົມທິດຕາເວັນອອກພັດຖືກມັນບໍ? ມັນຄົງຈະຫ່ຽວແຫ້ງໄປຮອດບ່ອນທີ່ມັນເກີດມານັ້ນ."
[11]ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍອີກ, ກ່າວວ່າ,[12]" ຈົ່ງກ່າວແກ່ເຊື້ອສາຍທີ່ມັກກະບົດນັ້ນວ່າ, 'ພວກເຈົ້າບໍ່ຮູ້ບໍວ່າ ສິ່ງເຫລົ່ານີ້ມີ
ຄວາມຫມາຍວ່າຢ່າງໃດ? ເບິ່ງແມ່! ກະສັດນະຄອນບາບີໂລນໄດ້ມາຍັງນະຄອນເຢຣູຊາເລັມ ແລະ ໄດ້ນຳເອົາກະສັດ ແລະ ເຈົ້າຊາຍທັງຫລາຍ
ແລະ ນຳພວກເຂົາກັບໄປບາບີໂລນ.
[13]ແລ້ວເຂົາໄດ້ເອົາເຊື້ອພະວົງຜູ້ໜຶ່ງມາ, ແລະ ຊົງເຮັດພັນທະສັນຍາກັບຜູ້ນັ້ນ, ແລະ ໄດ້ນຳເຂົາໄປກ້ອງຕົ້ນໂອກ.
ເຂົາໄດ້ນຳເອົາພວກຄົນທີ່ມີອຳນາດຂອງແຜ່ນດິນນັ້ນໄປ,[14]ເພື່ອວ່າຣາຊອານາຈັກນັ້ນອາດຈະກາຍມາຕົກຕ່ຳ ແລະ ບໍ່ອາດຍົກຕົນເອງຂຶ້ນອີກໄດ້.
ໂດຍການຮັກສາພັນນທະສັນຍາ ແຜ່ນດິນນັ້ນຈະຢູ່ລອດພົ້ນໄດ້.
[15]ແຕ່ກະສັດແຫ່ງເຢຣູຊາເລມໄດ້ກະບົດຕໍ່ເຂົາ ໂດຍການສົ່ງຣາຊະທູດໄປຍັງເອຢິບ ດ້ວຍຫວັງວ່າຈະໄດ້ມ້າຫລວງຫລາຍ ແລະກອງທັບ.
ເຂົາຈະສຳເລັດຫລື? ເຂົາຜູ້ເຮັດສິ່ງເຫລົ່ານີ້ຈະຫນີພົ້ນຫລື? ຖ້າເຂົາລະເມີດພັນທະສັນຍາ ເຂົາຈະຫນີພົ້ນຫລື?[16]ເຮົາມີຊີວິດຢູ່ສັນໃດ! —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ — ຜູ້ນັ້ນຈະຕ້ອງຕາຍໃນສະຖານທີ່ຂອງກະສັດ
ຜູ້ໄດ້ຕັ້ງເຂົາໃຫ້ເປັນກະສັດຢ່າງແນ່ນອນ, ກະສັດຜູ້ຊຶ່ງຫມິ່ນປະຫມາດຄຳສາບານຂອງເຂົາ, ແລະ ຜູ້ທີ່ໄດ້ລະເມີດຕໍ່ພັນທະສັນຍາ.
ເຂົາຈະຕາຍໃນກາງນະຄອນບາບີໂລນ.
[17]ຟາໂຣພ້ອມດ້ວຍກອງທະຫານກ້າ ແລະ ເຕົ້າໂຮມຜູ້ຊາຍຢ່າງຫລວງຫລາຍ ເພື່ອການສົງຄາມ ຈະບໍ່ຊ່ວຍປົກປ້ອງເຂົາໃນການສົງຄາມ,
ເມື່ອກອງທັບຂອງບາບີໂລນໄດ້ມີການກໍ່ສ້າງປ້ອມປາການ ແລະ ສ້າງກຳແພງອ້ອມ ເພື່ອຈະທຳລາຍຊີວິດຢ່າງຫລວງຫລາຍ.[18]ເພາະກະສັດ
ຫມິ່ນປະຫມາດຄຳສາບານຂອງເຂົາດ້ວຍການລະເມີດພັນທະສັນຍາ. ເບິ່ງແມ່, ເພາະເຂົາໄດ້ຍື່ນມື ເພື່ອສາບານຕົນ ແລະ ເຖິງວ່າເຂົາໄດ້ເຮັດ
ສິ່ງທັງປວງເຫລົ່ານີ້ ເຂົາກໍຈະຫນີບໍ່ພົ້ນ.
[19]ເພາະສະນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາມີຊີວິດຢູ່ສັນໃດ ມັນບໍ່ແມ່ນຄຳສາບານຂອງເຮົາທີ່ລາວໄດ້ຫມິ່ນປະຫມາດ
ແລະ ລະເມີດພັນທະສັນຍາແມ່ນບໍ? ເຮົາຈະນຳການລົງໂທດມາຕົກໃສ່ຫົວຂອງລາວນັ້ນ![20]ເຮົາຈະກາງແຫຂອງເຮົາອອກຄຸບລາວ, ແລະ ລາວ
ຈະຕິດກັບດັກຂອງເຮົາ. ແລ້ວເຮົາຈະນຳລາວເຂົ້າໄປໃນບາບີໂລນ ແລະ ພິພາກສາລາວຢູ່ບ່ອນນັ້ນສຳລັບການກະບົດຂອງລາວທີ່ລາວໄດ້ທໍລະ-
ຍົດຕໍ່ເຮົາ.[21]ສ່ວນພວກທີ່ລີໄພທັງຫມົດຂອງກອງທັບຈະລົ້ມລົງດ້ວຍຄົມດາບ, ແລະ ພວກທີ່ເຫລືອຢູ່ຈະກະຈັດກະຈາຍໄປໃນທຸກທິດທຸກທາງ.
ແລ້ວພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ; ເຮົາໄດ້ປະກາດແລ້ວວ່າເຫດການນັ້ນຈະເກີດຂຶ້ນ."
[22]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: 'ດັ່ງນັ້ນ ເຮົາເອງຈະເປັນຜູ້ເອົາປາຍຂອງຕົ້ນແປກປັກໄປ, ແລະ ເຮົາຈະເອົາໄປປັກຫ່າງຈາກງ່າ
ອ່ອນທັງຫລາຍຂອງມັນ. ເຮົາຈະຫັກມັນອອກ, ແລະ ເຮົາເອງຈະເປັນຄົນປູກມັນໄວ້ຢູ່ເທິງພູສູງ.[23]ເຮົາຈະປູກມັນໄວ້ຢູ່ເທິງພູເຂົາສູງຂອງ
ອິດສະຣາເອນ ເພື່ອມັນຈະແຕກງ່າ ແລະ ເກີດຜົນ, ແລະ ມັນຈະກາຍເປັນຕົ້ນແປກທີ່ດີເລີດ ດັ່ງນັ້ນ ນົກທຸກຊະນິດຈະມາອາໄສຢູ່ກ້ອງມັນ. ນົກ
ທຸກຊະນິດຈະມາເຮັດຮັງຢູ່ທີ່ຮົ່ມກິ່ງກ້ານທັງຫລາຍຂອງມັນ.
[24]ແລະຕົ້ນໄມ້ທຸກຕົ້ນໃນທົ່ງຈະຮູ້ວ່າ ເຮົາແມ່ນພຣະຢາເວ. ເຮົາຈະເຮັດຕົ້ນໄມ້ທີ່ສູງໃຫ້ເຕ້ຍລົງ ແລະ ເຮັດຕົ້ນໄມ້ທີ່ເຕ້ຍໃຫ້ສູງຂຶ້ນ. ເຮົາຈະໃຫ້
ຕົ້ນໄມ້ທີ່ຂຽວຫ່ຽວແຫ້ງໄປ ແລະ ເຮັດໃຫ້ຕົ້ນໄມ້ແຫ້ງໃຫ້ງາມສົດຊື່ນ. ເຮົາແມ່ນພຣະຢາເວ, ເຮົາໄດ້ປະກາດວ່າສິ່ງນີ້ຈະເກີດຂຶ້ນ; ແລະ ເຮົາກໍ
ໄດ້ເຮັດເຊັ່ນນັ້ນ."

 generated on Tue Jun 17 19:01:42 2025

18 1ພຣະຄຳຂອງພຣະຢາເວຊົງກ່າວມາເຖິງຂ້ານ້ອຍ, ກ່າວວ່າ,22 “ເຈົ້າຫມາຍຄວາມວ່າແນວໃດ, ເມື່ອເຈົ້າໄດ້ກ່າວເຖິງຄຳສຸພາສິດ
ທີ່ກ່ຽວຂ້ອງເຖິງຄົນອິດສະຣາເອນ ແລະ ກ່າວວ່າ 'ພໍ່ກິນຫມາກອະງຸ່ນສົ້ມ, ແລະ ແຕ່ພວກລູກທັງຫລາຍຊ້າພັດເຂັດແຂ້ວ'?

3ເຮົາມີຊີວິດຢູ່ແນ່ນອນສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ —
ຈະບໍ່ມີໂອກາດໃດໆທີ່ເຈົ້າຈະໄດ້ກ່າວສຸພາສິດນີ້ໃນອິດສະຣາເອນ.4ເບິ່ງແມ່! ທຸກຊີວິດເປັນຂອງເຮົາ — ຊີວິດຂອງພໍ່, ຊີວິດຂອງລູກຊາຍ, ແລະ
ພວກເຂົາເປັນຂອງເຮົາ! ຈິດວິນຍານຜູ້ໃດມີບາບ ຜູ້ນັ້ນກໍຈະຕ້ອງຕາຍ!
5ສິ່ງໃດທີ່ສາມດເວົ້າໄດ້ກ່ຽວກັບຊາຍທີ່ຊອບທຳ ແລະ ຜູ້ດຳເນີນຕາມຄວາມຍຸດຕິທຳ ແລະ ຄວາມຊອບທຳ —6ຖ້າຄົນນັ້ນບໍ່ໄດ້ກິນຢູ່ເທິງພູ
ແຫລະບໍ່ໄດ້ແນມເບິ່ງຮູບເຄົາລົບທັງຫລາຍຂອງເຊື້ອສາຍອິດສະຣາເອນ, ແລະ ບໍ່ໄດ້ເຮັດສິ່ງທີ່ເປັນມົນທິນກັບເມຍເພື່ອນບ້ານ,
ຫລືເຂົ້າຫາຜູ້ຍິງໃນເວລາທີ່ເປັນປະຈຳເດືອນ, ຜູ້ນັ້ນເປັນຊາຍຊອບທຳຢ່າງນັ້ນຫລື?
7ສິ່ງທີ່ສາມາດກ່າວໄດ້ຄື ເຂົາບໍ່ໄດ້ບີບບັງຄັບຄົນຫນຶ່ງຄົນໃດ, ແຕ່ຄືນຂອງຈຳນຳໃຫ້ແກ່ລູກຫນີ້, ແລະ ເຂົາບໍ່ເຄີຍປຸ້ນຊັບ, ແຕ່ໃຫ້ອາຫານແກ່ຜູ້ທີ່
ອຶດຢາກ ແລະ ໃຫ້ເສື້ອຜ້າແກ່ຜູ້ທີ່ເປືອຍກາຍ, ເຂົາເປັນຄົນຊອບທຳຫລືບໍ?8ສິ່ງທີ່ສາມາດກ່າວໄດ້ຄື ຜູ້ໃດທີ່ໃຫ້ຢືມເງິນໂດຍບໍ່ເອົາດອກ-
ເບ້ຍຫລາຍເກີນໄປ, ແລະ ເຂົາກໍບໍ່ເອົາກຳໄລຫລາຍເກີນໄປຈາກສິ່ງທີ່ເຂົາຂາຍເຊັ່ນນັ້ນຫລື? ມີການເວົ້າເຖິງເຂົາວ່າ ເຂົາດຳເນີນຕາມຄວາມ-
ຍຸດຕິທຳ ແລະ ສັດຊື່ລະຫວ່າງ ຄົນດ້ວຍກັນ9ຖ້າຄົນຜູ້ນັ້ນເດີນຕາມກົດບັນຍັດທັງຫລາຍຂອງເຮົາ ແລະ ເຮັດຕາມທຳບັນຍັດຂອງເຮົາດ້ວຍ
ຄວາມສັດຊື່ສຸດຈະລິດ, ແລ້ວຄຳສັນຍາສຳລັບຄົນຊອບທຳນີ້ກໍຄື: ເຂົາຈະມີຊີວິດຢູ່ຢາງແນ່ນອນ!—ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະ-
ຜູ້ເປັນເຈົ້າ.
10ແຕ່ຖ້າຜູ້ນັ້ນມີລູກຊາຍທີ່ໃຊ້ຄວາມຮຸນແຮງ ຜູ້ທີ່ເຮັດໃຫ້ເລືອດອອກ ແລະ ເຮັດສິ່ງຫນຶ່ງສິ່ງໃດໃນສິ່ງເຫລົ່ານັ້ນ,11ແມ່ນວ່າ ຜູ້ເປັນພໍ່ຂອງຕົນກໍບໍ່
ເຄີຍເຮັດໃນສິ່ງເຫລົ່ານີ້ຈັກເທື່ອເລີຍ, ແຕ່ເຂົາກິນອາຫານຢູ່ເທິງພູເຂົາ, ແລະ ເຂົາລ້ລວງເມຍຂອງເພື່ອນບ້ານ, ຈະເວົ້າກັບເຂົາວ່າແນວໃດ?
12ຊາຍຄົນນີ້ບັງຄັບສໍ້ໂກງຄົນຍາກຈົນ ແລະ ຄົນຂັດສົນ, ແລະ ໃຊ້ຄວາມຮຸນແຮງ ແລະ ຍາດຊິງເຄື່ອງຂອງຄົນອື່ນ, ແລະ ບໍ່ຍອມຄືນຂອງໃຫ້ແກ່
ຜູ້ເອົາມາຈຳນຳ, ແລະ ຕາຂອງເຂົາເພັ່ງເບິ່ງຮູບເຄົາລົບ ແລະ ເຮັດສິ່ງທີ່ຫນ້າລັງກຽດທັງຫລາຍ,13ແລະ ເຂົາໃຫ້ຄົນຢືມເງິນເພື່ອເອົາດອກ-
ເບ້ຍສູງກວ່າເຫດ ແລະເຂົາຫາກຳໄລຫລາຍເກີນຈາກສິ່ງທີ່ເຂົາຂາຍ, ຄົນນີ້ຄວນຈະມີຊີວິດຢູ່ ຫລືຢ່າງໃດ? ແນ່ນອນວ່າ ເຂົາຈະບໍ່ມີຊີວິດຢູ່!
ເຂົາຈະຕາຍຢ່າງແນ່ນອນ ແລະ ເລືອດຂອງເຂົາຈະຕົກເທິງເຂົາ ເພາະເຂົາໄດ້ເຮັດໃນສິ່ງຫນ້າກຽດຊັງທັງຫລາຍເຫລົ່ານີ້.
14ບັດນີ້ ເບິ່ງແມ່! ສົມມຸດວ່າ ມີຊາຍຜູ້ຫນຶ່ງມີລູກຊາຍຄົນຫນຶ່ງ, ແລະ ລູກຊາຍຂອງເຂົາ ກໍໄດ້ເຫັນຄວາມບາບທັງຫລາຍທີ່ພໍ່ໄດ້ເຮັດ, ແລະ
ແມ່ນວ່າເຂົາໄດ້ເຫັນ, ແຕ່ເຂົາກໍບໍ່ໄດ້ເຮັດຕາມສິ່ງເຫລົ່ານັ້ນ.15ລູກຊາຍຜູ້ນັ້ນ ບໍ່ໄດ້ກິນອາຫານທີ່ສະຖານບູຊາເທິງພູເຂົາ ຫລືເຂົາບໍ່ໄດ້ຫລຽວເບິ່ງ
ຮູບເຄົາລົບທັງຫລາຍຂອງເຊື້ອສາຍອິດສະຣາເອນ, ແລະເຂົາບໍ່ລ້ລວງເມຍຂອງເພື່ອນບ້ານ, ຈະເວົ້າເຖິງຄົນນັ້ນວ່າແນວໃດ?
16ລູກຊາຍຄົນນັ້ນບໍ່ໄດ້ບັງຄັບສໍ້ໂກງຜູ້ຫນຶ່ງຜູ້ໃດ, ຫລື ຢຶດເອົາສັນຍາ, ຫລື ລັກເອົາເຄື່ອງຂອງ, ແຕ່ເອົາອາຫານໃຫ້ແກ່ຜູ້ທີ່ຫິວໂຫຍ ແລະ ໃຫ້
ເສື້ອຜ້າແກ່ຜູ້ທີ່ເປືອຍກາຍ.17ລູກຊາຍຄົນນັ້ນ ບໍ່ໄດ້ບີບບັງຄັບຜູ້ໃດ ຫລື  ເອົາດອກເບ້ຍສູງເກີນເຫດ ຫລື
ຫາກຳໄລຈາກການກູ້ຢືມຫລາຍເກີນໄປ, ແຕ່ເຂົາເຊື່ອຟັງຄຳສັ່ງຂອງເຮົາ ແລະ ການປະພຶດຕາມພຣະທຳຂອງເຮົາ; ລູກຊາຍຄົນນັ້ນ ຈະບໍ່ຕາຍ
ຍ້ອນຄວາມບາບຂອງພໍ່ລາວ: ລາວຈະມີຊີວິດຢູ່ຢ່າງແນ່ນອນ!
18ສ່ວນພໍ່ຂອງເຂົາ, ຫາເງິນດ້ວຍການບັງຄັບສໍ້ໂກງຄົນອື່ນໆ ໂດຍການຂີ້ລັກຊັບສິນ ແລະ ຍາດຊິງພີ່ນ້ອງ, ແລະ
ເຮັດການບໍ່ດີທ່າມກາງປະຊາຊົນຂອງເຂົາ — ເບິ່ງແມ່, ລາວຈະຕາຍຍ້ອນບາບຂອງຕົນ.
19ແຕ່ເຈົ້າຖາມວ່າ, 'ເປັນຫຍັງລູກຊາຍຈຶ່ງບໍ່ໄດ້ຮ່ວມຮັບໂທດຍ້ອນຄວາມຜິດຂອງພໍ່?' ເພາະລູກຊາຍໄດ້ເຮັດສິ່ງທີ່ຖືກຕ້ອງ ແລະ ຊອບທຳ ແລະ
ໄດ້ເຮັດຮັກສາກົດບັນຍັດຂອງເຮົາທັງຫມົດ; ແລະ ລາວໄດ້ປະພຶດຕາມຢ່າງຄົບຖ້ວນ. ດັ່ງນັ້ນ ລາວຈຶ່ງຈະມີຊີວິດຢູ່ຢ່າງແນ່ນອນ!20ຜູ້ໃດເຮັດບາບ
, ຜູ້ນັ້ນຈະຕ້ອງຕາຍ. ລູກຊາຍບໍ່ຕ້ອງໄດ້ຮ່ວມຮັບໂທດຍ້ອນຄວາມຜິດຂອງພໍ່, ແລະ ພໍ່ຈະບໍ່ໄດ້ຮ່ວມຮັບໂທດຍ້ອນຄວາມຜິດຂອງລູກຊາຍ.
ຄົນຊອບທຳຈະໄດ້ຮັບຜົນແຫ່ງຄວາມຊອບທຳຂອງເຂົາເອງ, ແລະ ຄົນຊົ່ວກໍຈະໄດ້ຮັບການລົງໂທດຈາກການຊົ່ວຮ້າຍຂອງເຂົາເອງ.
21ຖ້າຫາກຄົນຊົ່ວຫັນຫນີຈາກບາບທັງຫລາຍທີ່ລາວເຮັດ, ແລະ ຮັກສາການປະພຶດຕາມພຣະທຳຂອງລາວ ແລະເຮັດແຕ່ສິ່ງທີ່ຖືກຕອ້ງ ແລະ
ຊອບທຳ, ແລ້ວລາວຈະມີຊີວິດ ແລະບໍ່ຕາຍ.22ການລະເມີດທັງສິ້ນທີ່ລາວໄດ້ເຮັດ ຈະບໍ່ຖືກຈົດຈຳ ແລະ ບໍ່ນຳມາເປັນຂໍ້ລົງໂທດລາວ. ລາວຈະມີ
ຈະມີຊີວິດຢູ່ ເພາະວ່າສິ່ງຊອບທຳທີ່ເຂົາໄດ້ເຮັດ.”
23ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ- ເຮົາມີຄວາມຊື່ນຊົມຍິນດີໃນຄວາມຕາຍຂອງຄົນຊົ່ວຮ້າຍ ແຕ່ເຮົາຈະບໍ່ຍິນດີ —
ໃນການຫັນຫນີຈາກທາງຂອງຕົນເພື່ອມີຊີວິດຢູ່ຫລື?
24ແຕ່ຖ້າຄົນຊອບທຳຫັນຫນີຈາກຄວາມຊອບທຳຂອງລາວ ໄປເຮັດບາບ ແລະ ເຮັດສິ່ງທີ່ຫນ້າກຽດຫນ້າຊັງທັງຫລາຍເຊັ່ນດຽວກັນກັບຄົນຊົ່ວ
ລາວຈະມີຊີວິດຢູ່ໄດ້ຫລື? ຄວາມຊອບທຳທັງຫລາຍທີ່ລາວໄດ້ເຮັດ ຈະບໍ່ເປັນສິ່ງຈົດຈຳ ເມື່ອລາວທໍລະຍົດເຮົາໃນການກະບົດຂອງລາວ. ດັ່ງນັ້ນ
ລາວຈະຕາຍໃນຄວາມບາບທັງຫລາຍທີ່ລາວໄດ້ເຮັດ.
25ແຕ່ເຈົ້າຍັງເວົ້າວ່າ, 'ວິທີທາງຂອງອົງພຣະຜູ້ເປັນເຈົ້າບໍ່ຍຸດຕິທຳ!' ເຊື້ອສາຍອິດສະຣາເອນເອີຍ! ຈົ່ງຟັງເຖີດ, ວິທີທາງຂອງເຮົາບໍ່ຍຸດຕິທຳຊັ້ນບໍ?
26ເມື່ອຄົນຊອບທຳຫັນຫນີຈາກຄວາມຊອບທຳຂອງລາວ, ແລະເຮັດການຊົ່ວຮ້າຍ ແລະ ຕາຍຍ້ອນສິ່ງເຫລົ່ານັ້ນ,
ແລ້ວລາວຈະຕາຍຍ້ອນການຊົ່ວທັງຫລາຍທີ່ລາວໄດ້ເຮັດໄປນັ້ນ.
27ແຕ່ເມື່ອຄົນຊົ່ວຫັນຫນີຈາກຄວາມຊົ່ວຂອງລາວທີ່ໄດ້ເຮັດໄປແລ້ວ ແລະ ກັບມາເຮັດສິ່ງຍຸດຕິທຳ ແລະ ຊອບທຳ, ແລ້ວເຂົາຈະຮັກສາຊີວິດ
ຂອງລາວໄວ້ໄດ້.28ເພາະລາວໄດ້ເຫັນ ແລະຫັນຫນີຈາກການທັງປວງ ທີ່ລາວໄດ້ເຮັດແລ້ວນັ້ນ. ລາວຈະມີຊີວິດຢູ່ຢ່າງແນ່ນອນ ແລະ
ລາວຈະບໍ່ຕາຍ.
29ແຕ່ເຊື້ອສາຍອິດສະຣາເອນຍັງກ່າວວ່າ, 'ວິທີທາງຂອງອົງພຣະຜູ້ເປັນເຈົ້າບໍ່ຍຸດຕິທຳ!' ປະຊາຊົນອິດສະຣາເອນເອີຍ, ວິທີທາງຂອງເຮົາບໍ່ຍຸດຕິ-
ທຳຊັ້ນບໍ? ວິທີທາງຂອງພວກເຈົ້າຕ່າງຫາກທີ່ບໍ່ຍຸດຕິທຳ ບໍ່ແມ່ນຫລື?30ດັ່ງນັ້ນ ເຮົາຈະຕັດສິນເຈົ້າແຕ່ລະຄົນຕາມການກະທຳຂອງເຂົາ
ເຊື້ອສາຍອິດສະຣາເອນເອີຍ —ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ. ຈົ່ງກັບໃຈໃຫມ່ ແລະ
ຫັນຫນີຈາກການລະເມີດທັງສິ້ນຂອງພວກເຈົ້າ ເພື່ອການລະເມີດເຫລົ່ານັ້ນ ຈະບໍ່ເປັນຫີນສະດຸດແຫ່ງການຊົ່ວຕໍ່ສູ້ເຈົ້າ.

 generated on Tue Jun 17 19:01:42 2025

31ຈົ່ງປະຖິ້ມການລ່ວງລະເມີດທັງປວງທີ່ພວກເຈົ້າເຮັດນັ້ນ; ຈົ່ງຮັບເອົາຈິດໃຈ ແລະ ວິນຍານໃຫມ່ເສຍ. ເຊື້ອສາຍ ອິດສະຣາເອນເອີຍ, ຫລື
ເປັນຫຍັງເຈົ້າຈຶ່ງຢາກຕາຍ? 32ເພາະເຮົາບໍ່ໄດ້ເພິ່ງພໍໃຈໃນຄວາມຂອງຜູ້ຫນຶ່ງຜູ້ໃດ — ຈົ່ງກັບໃຈໃຫມ່ ແລະ ມີຊີວິດຢູ່ເຖີດ!" —
ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.

 generated on Tue Jun 17 19:01:42 2025

# 19

[1]"ບັດນີ້, ເຈົ້າຈົ່ງເປັ່ງສຽງຮ້ອງເພງຄໍາຄວນຕໍ່ສູ້ຜູ້ນໍາທັງຫລາຍຂອງອິດສະຣາເອນ.[2]ແລະເວົ້າວ່າ, 'ແມ່ຂອງເຈົ້າແມ່ນໃຜ? ສິງໂຕແມ່,
ນາງຢູ່ກັບລູກສິງໂຕຜູ້; ຢູ່ທ່າມກາງໂຕສິງຫນຸ່ມ ແລະ ນາງລ້ຽງດູລູກໆຂອງນາງ.[3]ນາງຄືຫນຶ່ງໃນບັນດາຜູ້ລ້ຽງລູກສິງຂອງນາງ ໃຫ້ເຕີບໃຫຍ່
ກາຍເປັນສິງຫນຸ່ມ, ໂຕສິງທີ່ຝຶກໃນການຈີກເຫຍື່ອຂອງມັນ ແລະ ມັນກັດກິນເຫຍື່ອດ້ວຍຄວາມຫິວໂຫຍ.[4]ແລ້ວບັນດາປະຊາຊາດກໍໄດ້ຍິນ
ກ່ຽວກັບສິງນັ້ນ. ມັນກໍຖືກຈັບໃນກັບດັກຂອງພວກເຂົາ, ແລະພວກເຂົາລ່າມໂສ້ໄວ້ ແລະນໍາມັນມາຍັງແຜ່ນດິນເອຢິບ.

[5]ແລ້ວແມ່ສິງເຫັນວ່າ ເຖິງວ່ານາງຄອງຄອຍການກັບມາຂອງມັນດົນນານແລ້ວ, ແຕ່ຄວາມຫວັງຂອງນາງໄດ້ສູນໄປ, ດັ່ງນັ້ນ ນາງກໍເອົາລູກສິງໂຕ
ອື່ນມາອີກ ແລະ ລ້ຽງມັນໃຫ້ກາຍເປັນສິງຫນຸ່ມ.[6]ສິງຫນຸ່ມໂຕນີ້ ທ່ອງທ່ຽວໄປມາໃນທ່າມກາງຝູງສິງທັງຫລາຍ. ມັນເປັນສິງຫນຸ່ມ ແລະ
ມັນໄດ້ຮຽນແລະເຝິກການຈີກເຫຍື່ອຂອງມັນ; ມັນໄດ້ກັດກິນບັນດາມະນຸດ.[7]ມັນໄດ້ຈັບຍິງແມ່ຫມ້າຍທັງຫລາຍຂອງພວກເຂົາ ແລະ
ທໍາລາຍເມືອງທັງຫລາຍຂອງພວກເຂົາ. ແຜ່ນດິນນັ້ນກໍຖືກຮົກຮ້າງ ເພາະດ້ວຍໄດ້ຍິນສຽງຮ້ອງຄໍາລາມຂອງມັນ.
[8]ແຕ່ບັນດາປະຊາຊາດຈາກແຄວ້ນທັງປວງອ້ອມຮອບຕໍ່ສູ້ມັນ; ພວກເຂົາກາງແຫອອກຄຸບມັນ. ມັນກໍຖືກຈັບຢູ່ໃນກັບດັກຂອງພວກເຂົາ.[9]ພວກເຂົາ
ລ່າມໂສ້ມັນໄວ້ ແຫລະເອົາມັນໄວ້ໃນກົງ ແລ້ວນໍາມັນໄປໃຫ້ກະສັດບາບີໂລນ. ພວກເຂົາກໍຂັງມັນໄວ້ໃນທີ່ປ້ອມອັນເຂັ້ມແຂງ ເພື່ອບໍ່ໃຫ້ໄດ້ຍິນສຽງ
ຂອງມັນອີກຢູ່ເທິງພູເຂົາແຫ່ງອິດສະຣາເອນ.
[10]ແມ່ຂອງເຈົ້າເຫມືອນກັບເຄືອອະງຸ່ນທີ່ປູກໃນສາຍເລືອດຂ້າງແມ່ນ້ໍາ. ມັນມີຫມາກດົກ ແລະ ມີກິ່ງກ້ານຫລວງຫລາຍຍ້ອນມີນ້ໍາບໍລິບູນ.[11]ມັນມີ
ກິ່ງກ້ານທີ່ແຂງແຮງ ຊຶ່ງກາຍເປັນໄມ້ຄ້ອນເທົ້າຂອງຜູ້ປົກຄອງ, ແລະ ມັນສູງທ່າມກາງກິ່ງກ້ານທີ່ຕຶບຫນາ, ແລະ ຄວາມສູງຂອງມັນ
ກໍໄດ້ເປັນທີ່ພົບເຫັນໂດຍໃບດົກຫນາຂອງມັນ.
[12]ແຕ່ວ່າມັນຖືກຖອນອອກດ້ວຍຄວາມຄວາມໂກດຮ້າຍ ແລະ ຖືກຖິ້ມລົງພື້ນດິນ, ແລະ ລົມທາງທິດຕາເວັນອອກ ເຮັດໃຫ້ຜົນຂອງມັນຫ່ຽວ-
ແຫ້ງໄປ. ກິ່ງກ້ານທີ່ແຂງແຮງກໍຫັກ ແລະຫ່ຽວແຫ້ງໄປ ແລະ ໄຟກໍໄຫມ້ມັນເສຍ.[13]ບັດນີ້ ມັນຖືກປູກໄວ້ໃນຖິ່ນແຫ້ງແລ້ງກັນດານ, ໃນແຜ່ນດິນທີ່
ແຫ້ງແລ້ງ ແລະກະຫາຍນ້ໍາ.
[14]ໄຟກໍໄດ້ລາມມາຈາກກິ່ງກ້ານໃຫຍ່ຂອງມັນ ແລະ ເຜົາໄຫມ້ກິ່ງກ້ານອື່ນໆ ແລະ ຫມາກມັນຈົນຫມົດ. ຈຶ່ງບໍ່ມີກິ່ງກ້ານທີ່ແຂງແຮງເຫລືອຢູ່ໃນ
ຕົ້ນອີກຕໍ່ໄປ, ບໍ່ມີໄມ້ຄ້ອນເທົ້າສໍາລັບການປົກຄອງ.' ນີ້ເປັນບົດເພງຄໍາຄວນ ແລະ ຈະໃຊ້ສໍາລັບຮ້ອງເປັນບົດເພງຄໍາຄວນບົດຫນຶ່ງ.”

20 [1]ສິ່ງນີ້ເກີດຂຶ້ນໃນວັນທີສິບ, ເດືອນທີຫ້າ, ໃນປີທີເຈັດ, ທີ່ພວກຜູ້ໃຫຍ່ຂອງອິດສະຣາເອນບາງຄົນໄດ້ມາທູນຖາມພຣະຢາເວ ແລະ
ພວກເຂົາໄດ້ນັ່ງຢູ່ຕໍ່ຫນ້າເຮົາ.

[2]ແລ້ວພຣະທຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, [3]“ບຸດແຫ່ງມະນຸດເອີຍ, ຈົ່ງເວົ້າກັບພວກຜູ້ໃຫຍ່ຂອງອິດສະຣາເອນ ແລະ ກ່າວແກ່
ພວກເຂົາວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າ ຊຶ່ງກ່າວດັ່ງນີ້ວ່າ: ພວກເຈົ້າມາຈະມາສອບຖາມເຮົາບໍ? ຢ່າງທີ່ເຮົາມີຊີວິດຢູ່ສັນໃດ, ເຮົາຈະບໍ່-
ຖືກສອບຖາມດ້ວຍພວກເຈົ້າສັນນັ້ນ! — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'
[4]ເຈົ້າຈະພິພາກສາພວກເຂົາບໍ? ບຸດແຫ່ງມະນຸດເອີຍ, ເຈົ້າຈະພິພາກສາບໍ? ຈົ່ງໃຫ້ພວກຂົາຮູ້ເຖິງຄວາມຫນ້າກຽດຊັງຂອງບັນພະບູລຸດຂອງ
ພວກເຂົາ. [5]ຈົ່ງກ່າວແກ່ພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊຶ່ງກ່າວດັ່ງນີ້ວ່າ: ໃນວັນນັ້ນເມື່ອເຮົາເລືອກອິດສະຣາເອນໄວ້ ແລະ
ເຮົາໄດ້ຍົກມືສາບານຕໍ່ລູກຫລານຂອງເຊື້ອສາຍຂອງຢາໂຄບ, ແລະ ໄດ້ສະແດງຕົນໃຫ້ພວກເຂົາຮູ້ຈັກໃນແຜ່ນດິນເອຢິບ, ເມື່ອ
ເຮົາຍົກມືຂອງເຮົາຂຶ້ນສາບານກັບພວກເຂົາວ່າ, ເຮົາໄດ້ກ່າວວ່າ, "ເຮົາເປັນພຣະຢາເວພຣະເຈົ້າຂອງພວກເຈົ້າ"— [6]ໃນວັນນັ້ນ ເຮົາ
ຍົກມືຂອງເຮົາຂຶ້ນສາບານຕໍ່ພວກເຂົາວ່າ ເຮົາຈະນຳພວກເຂົາອອກຈາກແຜ່ນດິນເອຢິບ ໄປຍັງແຜ່ນດິນທີ່ເຮົາໄດ້ຈັດຕຽມໄວ້ໃຫ້ພວກ-
ເຂົາຢ່າງລະມັດລະວັງ. ເປັນແຜ່ນດິນທີ່ມີນ້ຳນົມ ແລະ ນ້ຳເຜິ້ງໄຫລບໍລິບູນ; ມັນເປັນເຄື່ອງປະດັບທີ່ສວຍທີ່ສຸດໃນບັນດາແຜ່ນດິນທັງຫລາຍ.
[7]ແລະເຮົາກ່າວແກ່ພວກເຂົາວ່າ, "ໃຫ້ພວກເຈົ້າແຕ່ລະຄົນຈົ່ງຖິ້ມສິ່ງທີ່ຫນ້າກຽດຊັງໄປຈາກສາຍຕາຂອງເຂົາເສຍ ແລະ ຮູບເຄົາລົບທັງຫລາຍ
ຂອງເອຢິບນຳ. ຢ່າໃຫ້ໂຕຂອງເຈົ້າເປັນມົນທິນ; ເຮົາແມ່ນພຣະຢາເວ ອົງພຣະເຈົ້າຂອງພວກເຈົ້າ."
[8]ແຕ່ພວກເຂົາໄດ້ກະບົດຕໍ່ເຮົາ ແລະ ບໍ່ຍອມເຊື່ອຟັງເຮົາ. ພວກເຂົາແຕ່ລະຄົນບໍ່ຍອມປະຖິ້ມສິ່ງທີ່ຫນ້າກຽດຊັງໄປຈາກສາຍຂອງເຂົາເສຍ ຫລື
ປະຖິ້ມຮູບເຄົາລົບທັງຫລາຍຂອງເອຢິບ, ດັ່ງນັ້ນ ເຮົາຕັ້ງໃຈທີ່ຈະຖອກເທຄວາມໂກດຮ້າຍຂອງເຮົາອອກເຫນືອພວກເຂົາ ເພື່ອໃຫ້ສະສົມກັບ
ຄວາມໂກດຮ້າຍຂອງເຮົາມີຕໍ່ພວກເຂົາໃນທ່າມກາງແຜ່ນດິນເອຢິບ. [9]ເຮົາເຮັດເພື່ອເຫັນແກ່ນາມຂອງເຮົາ ເພື່ອຈະ
ບໍ່ຍອມໃຫ້ພຣະນາມນັ້ນຖືກຫມິ່ນປະຫມາດໃນສາຍຕາປະຊາຊາດທັງປວງ ທີ່ອາໄສຢູ່ທີ່ນັ້ນ. ເຮົາຈຶ່ງໄດ້ສະແດງຕົນໃຫ້ພວກເຂົາຮູ້, ແລະ
ເຫັນດ້ວຍສາຍຕາຂອງພວກເຂົາໂດຍການນຳພວກເຂົາອອກມາຈາກແຜ່ນດິນເອຢິບ.
[10]ດັ່ງນັ້ນ ເຮົາໄດ້ສົ່ງພວກເຂົາອອກໄປຈາກແຜ່ນດິນເອຢິບແລະ ນຳພວກເຂົ້າມາຍັງຖິ່ນແຫ້ງແລ້ງກັນດານ.
[11]ເຮົາໄດ້ໃຫ້ກົດເກນຂອງເຮົາແກ່ພວກເຂົາ ແລະ ກົດບັນຍັດຂອງເຮົາໃຫ້ພວກເຂົາຮູ້ ເພື່ອແຕ່ລະຄົນໄດ້ມີຊີວິດຢູ່
ຖ້າພວກເຂົາເຊື່ອງຟັງສິ່ງເຫລົ່ານັ້ນ. [12]ແລ້ວເຮົາໄດ້ໃຫ້ບັນດາສະບາໂຕຂອງເຮົາແກ່ພວກເຂົາ ເພື່ອເປັນຫມາຍສຳຄັນລະຫວ່າງເຮົາ ແລະ ພວກ-
ເຂົາ, ເພື່ອພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ ເປັນຜູ້ເຮັດໃຫ້ພວກເຂົາບໍຣິສຸດ.
[13]ແຕ່ເຊື້ອສາຍອິດສະຣາເອນໄດ້ກະບົດຕໍ່ສູ້ເຮົາໃນຖິ່ນແຫ້ງແລ້ງກັນດານ. ພວກເຂົາບໍ່ໄດ້ດຳເນີນຕາມພຣະທຳຂອງເຮົາ; ແຕ່ພວກເຂົາໄດ້ປະຕິ-
ເສດຂໍ້ບັນຍັດຂອງເຮົາ, ຜູ້ນັ້ນຈະມີຊີວິດຢູ່ ຖ້າເຂົາເຊື່ອຟັງສິ່ງເຫລົ່ານັ້ນ. ແຕ່ພວກເຂົາລົບລູ່ບັນດາສະບາໂຕຂອງເຮົາ, ດັ່ງນັ້ນ ເຮົາຈຶ່ງກ່າວວ່າ,
ເຮົາຈະຖອກເທຄວາມໂກດຮ້າຍຂອງເຮົາອອກເຫນືອພວກເຂົາໃນຖິ່ນແຫ້ງແລ້ງກັນດານ ເພື່ອທຳລາຍພວກເຂົາໃຫ້ຫມົດສິ້ນ. [14]ແຕ່ເຮົາກໍເຮັດ
ໂດຍເຫັນແກ່ນາມຂອງເຮົາເອງ ເພື່ອບໍ່ໃຫ້ພຣະນາມນັ້ນເຊື່ອມກຽດໃນສາຍຕາຂອງປະຊາຊາດທັງຫລາຍ,
ຄືຕໍ່ຫນ້າຜູ້ທີ່ເຮົາໄດ້ນຳເຂົາອອກຈາກເອຢິບ.
[15]ດັ່ງນັ້ນ ເຮົາກໍໄດ້ຍົກມືຂອງເຮົາສາບານຕໍ່ພວກເຂົາໃນຖິ່ນແຫ້ງແລ້ງກັນດານວ່າ ເຮົາຈະບໍ່ນຳພວກເຂົ້າມາໃນແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່ພວກ-
ເຂົາ, ຊຶ່ງເປັນແຜ່ນດິນທີ່ມີນ້ຳນົມ ແລະນ້ຳເຜິ້ງໄຫລບໍລິບູນ, ມັນເປັນເຄື່ອງປະດັບທີ່ສວຍງາມທີ່ສຸດໃນບັນດາແຜ່ນດິນທັງຫລາຍ.
[16]ເຮົາໄດ້ສາບານເພາະພວກເຂົາໄດ້ປະຕິເສດບໍ່ຮັບຂໍ້ບັນຍັດຂອງເຮົາ ແລະ ບໍ່ດຳເນີນຕາມພຣະທຳຂອງເຮົາ, ແລະ ພວກເຂົາໄດ້ລົບລູ່ບັນດາ
ວັນສະບາໂຕຂອງເຮົາ, ເພາະວ່າຈິດໃຈຂອງພວກເຂົາໄປຕິດຕາມຮູບເຄົາລົບຂອງຕົນ. [17]ເຖິງປານນັ້ນກໍດີ ໃນຕາຂອງເຮົາກໍຍັງມີຄວາມປານີ
ຕໍ່ການທຳລາຍຂອງພວກເຂົາ ແລະ ເຮົາບໍ່ໄດ້ທຳລາຍພວກເຂົາໃຫ້ສູນສິ້ນໄປໃນຖິ່ນແຫ້ງແລ້ງກັນດານນັ້ນ.
[18]ເຮົາໄດ້ເວົ້າກັບລູກຊາຍ ແລະ ລູກຍິງຂອງພວກເຂົາໃນຖິ່ນແຫ້ງແລ້ງກັນດານນັ້ນວ່າ, "ຢ່າດຳເນີນຕາມກົດເກນຂອງບັນພະບູລຸດຂອງເຈົ້າ; ຫລື
ຮັກສາຂໍ້ບັນຍັດຂອງພວກເຂົາ ຫລືເຮັດຕົນໃຫ້ເປັນມົນທິນດ້ວຍບັນດາຮູບເຄົາລົບຕ່າງໆ. [19]ເຮົາຄືພຣະຢາເວ ອົງພຣະເຈົ້າຂອງພວກເຈົ້າ; ຈົ່ງດຳ-
ເນີນຕາມພຣະທຳຂອງເຮົາ ແລະ ຈົ່ງເຊື່ອຟັງຂໍ້ບັນຍັດຂອງເຮົາ ແລະ ປະພຶດຕາມ. [20]ຈົ່ງຮັກສາວັນສະບາໂຕຂອງເຮົາໃຫ້ບໍຣິສຸດ ເພື່ອຈະເປັນ
ຫມາຍສຳຄັນລະຫວ່າງເຮົາກັບເຈົ້າ, ເພື່ອເຈົ້າຈະຮູ້ວ່າເຮົາແມ່ນພຣະຢາເວພຣະເຈົ້າຂອງພວກເຈົ້າ."
[21]ແຕ່ລູກຊາຍ ແລະ ລູກຍິງທັງຫລາຍຂອງພວກເຂົາໄດ້ກະບົດຕໍ່ເຮົາ. ພວກເຂົາບໍ່ໄດ້ດຳເນີນຕາມກົດບັນຍັດຂອງເຮົາ ຫລືບໍ່ຮັກສາຂໍ້ຄຳສັ່ງຂອງ
ເຮົາ, ຊຶ່ງເປັນສິ່ງທີ່ມະນຸດອາດມີຊີວິດຢູ່ໄດ້ຖ້າພວກເຂົາເຊື່ອຟັງສິ່ງເຫລົ່ານັ້ນ. ພວກເຂົາໄດ້ຫມິ່ນປະຫມາດວັນສະບາໂຕຂອງເຮົາ, ດັ່ງນັ້ນ
ເຮົາຕັ້ງໃຈທີ່ຈະຖອກເທຄວາມໂກດຮ້າຍຂອງເຮົາລົງເຫນືອພວກເຂົາ ເພື່ອໃຫ້ສົມກັບຄວາມໂກດຮ້າຍຂອງເຮົາຕໍ່ສູ້ພວກເຂົາໃນຖິ່ນແຫ້ງ-
ແລ້ງກັນດານ. [22]ແຕ່ເຮົາໄດ້ຫັນຫລັງຈາກການກະທຳຂອງເຮົາ ເພື່ອເຫັນແກ່ນາມຂອງເຮົາ, ເພື່ອບໍ່ໃຫ້ນາມນັ້ນເຊື່ອມເສຍກຽດຕໍ່ສາຍ-
ຕາຂອງປະຊາຊາດທັງຫລາຍທີ່ເຮົານຳອອກມາຈາກອິດສດຣາເອນ.
[23]ເຮົາເອງກໍໄດ້ຍົກມືຂອງເຮົາປະຕິຍານຕໍ່ພວກເຂົາໃນຖິ່ນແຫ້ງແລ້ງກັນດານາວ່າ, ເຮົາຈະກະຈັດກະຈາຍໄປໃນທ່າມກາງປະຊາຊາດ ແລະ
ແຍກພວກເຂົາໄປຢູ່ຕາມດິນແດນທັງຫລາຍ. [24]ເຮົາໄດ້ຕັດສິນໃຈເຊັ່ນນີ້ ເພາະວ່າພວກເຂົາບໍ່ໄດ້ເຮັດຕາມຂໍ້ຄຳສັ່ງຂອງເຮົາ, ແຕ່ພວກເຂົາໄດ້ປະ-
ຕິເສດກົດບັນຍັດຂອງເຮົາ ແລະ ຫມິ່ນປະຫມາດວັນສະບາໂຕທັງຫລາຍຂອງເຮົາ. ໃນສາຍຕາຂອງພວກເຂົາກໍຈັບຈ້ອງຢູ່ທີ່ຮູບເຄົາລົບແຫ່ງບັນ-
ພະບູລຸດຂອງພວກເຂົາ.
[25]ແລ້ວເຮົາຍັງໄດ້ໃຫ້ກົດບັນຍັດທີ່ບໍ່ດີແກ່ພວກເຂົາ, ແລະ ໃຫ້ຂໍ້ຄຳສັ່ງທີ່ບໍ່ເຮັດໃຫ້ພວກເຂົາບໍ່ສາມາດດຳລົງຊີວິດໄດ້. [26]ເຮົາກໍໄດ້ເຮັດໃຫ້ພວກ-
ເຂົາເປັນມົນທິນດ້ວຍເຄື່ອງຖວາຍຂອງພວກເຂົາເອງ ເມື່ອພວກເຂົາຖວາຍບູຊາລູກຊາຍກົກທຸກຄົນ ແລະ ໂຍນພວກເຂົາເຂົ້າກອງໄຟ. ເຮົາເຮັດ-
ເຊັ່ນນີ້ ເພື່ອເຮັດໃຫ້ພວກເຂົາຢ້ານກົວ ເພື່ອໃຫ້ພວກເຂົາຮູ້ວ່າ ເຮົາແມ່ນພຣະຢາເວ!'
[27]ເພາະສະນັ້ນ ບຸດແຫ່ງມະນຸດເອີຍ, ຈົ່ງເວົ້າກັບເຊື້ອສາຍອິດສະຣາເອນ ແລະ ກ່າວແກ່ພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊຶ່ງກ່າວ
ດັ່ງນີ້ວ່າ: ບັນພະບູລຸດຂອງເຈົ້າກໍໄດ້ຫມິ່ນປະຫມາດເຮົາອີກໃນເລື່ອງນີ້ດ້ວຍເມື່ອພວກເຂົາບໍ່ສັດຊື່ຕໍ່ເຮົາ. [28]ເມື່ອພວກເຂົາເຂົ້າມາໃນແຜ່ນດິນທີ່
ເຮົາສັນຍາວ່າຈະໃຫ້ພວກເຂົານັ້ນແລ້ວ, ແລະ ເມື່ອໃດທີ່ພວກເຂົາໄດ້ເຫັນເນີນພູສູງ ຫລືເຫັນຕົ້ນໄມ້ໃບດົກ, ພວກເຂົາໄດ້ຖວາຍເຄື່ອງບູຊາ,
ພວກເຂົາໄດ້ເຮັດໃຫ້ເຮົາໃຈຮ້າຍດ້ວຍເຄື່ອງຖວາຍບູຊາເຫລົ່ານັ້ນ, ແລະ ໃນບ່ອນນັ້ນ ພວກເຂົາກໍໄດ້ຖວາຍເຄື່ອງເຜົາບູຊາ ແລະ


generated on Tue Jun 17 19:01:42 2025

ເຂົາໄດ້ຖືກຖອກເຄື່ອງດື່ມບູຊາອອກໃນບ່ອນນັ້ນ.[29]ແລ້ວເຮົາໄດ້ກ່າວກັບພວກເຂົາວ່າ, "ສະຖານທີ່ນະມັດສະການສູງ ຊຶ່ງເປັນບ່ອນທີ່
ເຈົ້ານຳເຄື່ອງຖວາຍເຂົ້າໄປນັ້ນຄືຫຍັງ?" ດັ່ງນັ້ນ ພວກເຂົາຈຶ່ງເອີ້ນຊື່ບ່ອນນັ້ນວ່າ ບາມາ ມາຈົນເຖິງມື້ວັນນີ້.'
[30]ເພາະສະນັ້ນ ຈົ່ງກ່າວແກ່ເຊື້ອສາຍອິດສະຣາເອນວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເປັນຫຍັງພວກເຈົ້າເຮັດຕົນໃຫ້-
ເປັນມົນທິນຕາມຢ່າງວິທີທາງບັນພະບູລຸດຂອງພວກເຈົ້າ? ແລະ ເປັນຫຍັງພວກເຈົ້າໄດ້ປະພຶດຕົວເຫມືອນຍິງໂສເພນີ, ທີ່ສະແຫວງຫາແຕ່ສິ່ງທີ່
ຫນ້າກຽດຊັງຢ່າງນີ້?.[31]ເມື່ອພວກເຈົ້າຖວາຍເຄື່ອງບູຊາ ແລະ ພວກເຈົ້າໄດ້ໂຍນລູກຊາຍເຂົ້າໄປໃນໄຟ, ຈົນເຖິງບັດນີ້ ພວກເຈົ້າກໍໄດ້ເຮັດຕົນໃຫ້-
ເປັນມົນທິນ ດ້ວຍບັນດາຮູບເຄົາລົບຂອງພວກເຈົ້າທັງຫມົດ. ດັ່ງນັ້ນ ເປັນຫຍັງເຮົາຄວນໃຫ້ພວກເຈົ້າມາຖາມເຮົາ, ເຊື້ອສາຍອິດສະຣາເອນ
ເອີຍ? ເຮົາມີຊີວິດຢູ່ຢ່າງແນ່ນອນສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ເຮົາຈະບໍ່ໃຫ້ເຈົ້າຖາມເຮົາສັນນັ້ນ.[32]ຄື
ສິ່ງທີ່ພວກເຈົ້າຄິດຢູ່ນັ້ນ ມັນຈະບໍ່ເກີດຂຶ້ນຢ່າງແນ່ນອນ. ພວກເຈົ້າເວົ້າວ່າ, 'ຂໍໃຫ້ພວວກເຮົາເປັນເຫມືອນປະຊາຊາດທັງຫລາຍ, ຄືເປັນເຫມືອນ
ເຜົ່າຕ່າງໆໃນແຜ່ນນດິນອື່ນໆ ທີ່ຈະນະມັດສະການໄມ້ ແລະ ສີລາ."
[33]ເຮົາມີຊີວິດຢູ່ສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ເຮົາຈະປົກຄອງເຫນືອເຈົ້າດ້ວຍມືທີ່ມີຣິດອຳນາດຂອງເຮົາ,
ຢຽດແຂນອອກ, ແລະຖອກເທຄວາມໂກດຮ້າຍລົງເຫນືອພວກເຈົ້າຢ່າງແນ່ນອນສັນນັ້ນ.[34]ເຮົາຈະນຳເຈົ້າອອກມາຈາກຊົນຊາດທັງຫລາຍ ແລະ
ຈະຮວບຮວມເຈົ້າອອກມາຈາກປະເທດທັງປວງ ຊຶ່ງທີ່ເຈົ້າຖືກກະຈັດກະຈາຍໄປຢູ່ນັ້ນ. ເຮົາຈະເຮັດສິ່ງນີ້ດ້ວຍມືທີ່ມີຣິດອຳນາດ ແລະ
ຖອກເທຄວາມໂກດຮ້າຍອອກມາ.[35]ແລ້ວເຮົາຈະນຳພວກເຈົ້າເຂົ້າໄປໃນຖິ່ນແຫ້ງແລ້ງກັນດານແຫ່ງຊົນຊາດທັງຫລາຍ ແລະ ໃນບ່ອນນັ້ນເຮົາຈະ
ພິພາກສາເຈົ້າແບບຫນ້າຕໍ່ຫນ້າ.
[36]ຢ່າງທີ່ເຮົາໄດ້ພິພາກສາບັນພະບູລຸດຂອງເຈົ້າໃນຖິ່ນແຫ້ງແລ້ງກັນດານແຫ່ງເອຢິບນັ້ນ, ເຮົາກໍຈະພິພາກສາພວກເຈົ້າເຊັ່ນກັນ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.[37]ເຮົາຈະເປັນເຫດໃຫ້ພວກເຈົ້າລອດຄະທາອຳນາດໄປ, ແລະ ເຮົາຈະໃຫ້
ເຈົ້າເຊື່ອຟັງຂໍ້ຄຳສັ່ງທັງຫລາຍຂອງພັນທະສັນຍາ.[38]ເຮົາຈະຊຳລະພວກກະບົດຈາກທ່າມກາງເຈົ້າ ແລະ ຄົນທັງຫລາຍທີ່ຕໍ່ຕ້ານເຮົາ. ເຮົາຈະນຳ
ພວກເຂົາອອກຈາກແຜ່ນດິນໄປອາໄສຢູ່ຢ່າງຄົນຕ່າງດ້າວ, ແຕ່ພວກເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນອິດສະຣາເອນ. ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນ
ພຣະຢາເວ.
[39]ສ່ວນພວກເຈົ້າ, ໂອ້ ເຊື້ອສາຍອິດສະຣາເອນເອີຍ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ແຕ່ລະຄົນຈົ່ງໄປບົວລະບັດຮູບເຄົາລົບຂອງ
ເຈົ້າ. ນະມັດສະການ ຖ້າຫາກເຈົ້າບໍ່ຟັງເຮົາ, ແຕ່ເຈົ້າຈະຕ້ອງບໍ່ຫມິ່ນປະຫມາດນາມຊື່ອັນບໍຣິ-
ສຸດຂອງເຮົາດ້ວຍເຄື່ອງຖວາຍ ແລະ ດ້ວຍຮູບເຄົາລົບຂອງເຈົ້າ.
[40]ເພາະວ່າຢູ່ເທິງພູເຂົາບໍຣິສຸດຂອງເຮົາ, ຄືພູເຂົາສູງຂອງແຫ່ງອິດສະຣາເອນ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ບັນ-
ດາເຊື້ອສາຍທັງຫມົດຂອງອິດສະຣາເອນຈະນະມັດສະການເຮົາຢູ່ທີ່ໃນແຜ່ນດິນນັ້ນ. ເຮົາຍິນດີທີ່ຈະຮັບເອົາເຄື່ອງຖວາຍຂອງພວກເຈົ້າໃນທີ່ນັ້ນ,
ແລະ ທັງຜົນທຳອິດແຫ່ງເຄື່ອງບັນນາການອັນບໍຣິສຸດທັງຫມົດຂອງເຈົ້າ.[41]ເຮົາຈະຍອມຮັບເອົາເຫມືອນກິ່ນຫອມຂອງເຄື່ອງຫອມ
ເມື່ອເຮົານຳພວກເຈົ້າອອກຈາກຊົນຊາດທັງຫລາຍ ແລະ ຮວບຮວມພວກເຈົ້າອອກຈາກປະເທດທີ່ພວກເຈົ້າຖືກກະຈັດກະຈາຍໄປຢູ່ນັ້ນ. ເຮົາສະ-
ແດງຄວາມບໍຣິສຸດຂອງເຮົາທ່າມກາງເຈົ້າໃຫ້ປະຊາຊາດທັງຫລາຍໄດ້ເຫັນ.
[42]ແລ້ວ, ເມື່ອເຮົານຳເຈົ້າເຂົ້າໃນແຜ່ນດິນອິດສະຣາເອນ, ໄປຍັງແຜ່ນດິນທີ່ເຮົາໄດ້ຍົກມືສາບານໄວ້ວ່າ ຈະມອບໃຫ້ແກ່ບັນພະບູລຸດຂອງພວກ
ເຈົ້າ, ພວກເຈົ້າຈະຮູ້ວ່າວ່າ ເຮົາແມ່ນພຣະຢາເວ.[43]ແລ້ວ ພວກເຈົ້າຈະນຶກເຖິງວິທີທາງອັນຊົ່ວຮ້າຍ, ແລະ ການກະທຳທັງຫມົດຂອງເຈົ້າ ຊຶ່ງເຈົ້າ
ໄດ້ເຮັດໃຫ້ໂຕຂອງເຈົ້າເປັນມົນທິນ, ແລະ ພວກເຈົ້າຈະກຽດຊັງຕົນເອງໃນສາຍຕາຂອງເຈົ້າເອງ, ເພາະຄວາມຊົ່ວທັງຫລາຍຊຶ່ງເຈົ້າໄດ້ເຮັດນັ້ນ.
[44]ດັ່ງນັ້ນ ພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ ເມື່ອເຮົາໄດ້ເຮັດແບບນີ້ກັບເຈົ້າ ເພາະເຫັນແກ່ນາມຊື່ຂອງເຮົາ,
ບໍ່ແມ່ນຕາມວິທີທາງອັນຊົ່ວຮ້າຍຂອງເຈົ້າ, ຫລືຕາມການກະທຳທີ່ເຊື່ອມກຽດຂອງເຈົ້າ, ໂອ ເຊື້ອສາຍອິດສະຣາເອນເອີຍ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.”'
[45]ແລ້ວ ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້ານ້ອຍວ່າ, ກ່າວວ່າ,[46]“ບຸດແຫ່ງມະນຸດເອີຍ, ຈົ່ງມຸ້ງຫນ້າໄປດິນແດນທາງທິດໃຕ້ ແລະ ກ່າວໂທດ
ຕໍ່ສູ້ທິດໃຕ້; ຈົ່ງປະກາດພຣະທຳຕໍ່ສູ້ເຂດແດນປ່າໄມ້ທີ່ຢູ່ໃນເນເກບ.[47]ຈົ່ງກ່າວແກ່ປ່າໄມ້ແຫ່ງເນເກບວ່າ, ' ນີ້ເປັນຄຳປະກາດຂອງພຣະຢາເວ —
ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋, ເຮົາຈະກໍໄຟໄວ້ໃນທ່າມກາງເຈົ້າ. ເຮົາຈະເຜົາຜານຕົ້ນໄມ້ຂຽວ ແລະ ຕົ້ນໄມ້ແຫ້ງທຸກຕົ້ນທີ່ຢູ່
ໃນທ່າມກາງເຈົ້າ. ແປວໄຟເຫລົ່ານີ້ ກໍຈະລຸກໄຫມ້ ແລະ ມອດບໍ່ເປັນ; ຫນ້າທຸກຫນ້າຕັ້ງແຕ່ທິດໃຕ້ຈົນເຖິງທິດເຫນືອຈະຖືກໄຟລວກ.
[48]ແລ້ວມະນຸດທຸກຄົນເຫັນວ່າ ເຮົາແມ່ນພຣະຢາເວເປັນຜູ້ກໍໄຟນັ້ນ ເມື່ອເຮົາໃຕ້ໄຟແລ້ວ, ມັນຈະມອດບໍ່ເປັນ.'"[49]ແລ້ວຂ້ານ້ອຍຈຶ່ງເວົ້າວ່າ
“ອະນິຈັງເອີຍ, ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ, ພວກເຂົາກຳລັງກ່າວເຖິງຂ້ານ້ອຍວ່າ ' ເຂົາເປັນພຽງຜູ້ເລົ່າຄຳອຸປະມາບໍ່ແມ່ນຫລື?””

 generated on Tue Jun 17 19:01:42 2025

21 [1]ແລ້ວ ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍວ່າ, ກ່າວວ່າ,[2]“ບຸດແຫ່ງມະນຸດເອີຍ, ຈົ່ງມຸ້ງໜ້າຂອງເຈົ້າຕໍ່ສູ້ນະຄອນເຢຣູຊາເລັມ, ແລະ
ກ່າວໂທດສະຖານທີ່ນະມັດສະການທັງຫລາຍ; ຈົ່ງທຳນວາຍຕໍ່ສູ້ແຜ່ນດິນອິດສະຣາເອນ.[3]ແລະຈົ່ງກ່າວແກ່ແຜ່ນດິນອິດສະຣາເອນວ່າ,
'ພຣະຢາເວຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະຕໍ່ສູ້ກັບເຈົ້າ! ເຮົາຈະຖອດດາບຂອງເຮົາອອກຈາກຝັກ ແລະ ເຮົາຈະຕັດທັງຄົນຊອບທຳ ແລະ ຄົນ
ຊົ່ວອອກຈາກເຈົ້າເສຍ!

[4]ເພື່ອເຮົາຈະຕັດທັງຄົນຊອບທຳ ແລະ ຄົນຊົ່ວອອກຈາກເຈົ້າເສຍ, ດາບຂອງເຮົາຈະອອກຈາກຝັກໄປຕໍ່ສູ້ມະນຸດທັງໝົດຈາກທິດໃຕ້ເຖິງທິດ-
ເໜືອ.[5]ແລ້ວມະນຸດທຸກຄົນຈະຮູ້ວ່າ, ເຮົາແມ່ນພຣະຢາເວ, ເຮົາໄດ້ຖອດດາບຂອງເຮົາອອກຈາກຝັກແລ້ວ ແລະ ຈະບໍ່ເກັບໃສ່ຝັກອີກ!'
[6]ສຳລັບເຈົ້າ, ບຸດແຫ່ງມະນຸດເອີຍ, ຈົ່ງໂອ່ຍຄາງດ້ວຍໃຈທີ່ແຕກສະຫລາຍ! ດ້ວຍຄວາມທຸກລະທົມຂົມຂື່ນໃຈຕໍ່ໜ້າພວກເຂົາ![7]ແລ້ວມັນ
ຈະເກີດຂຶ້ນ ເມື່ອພວກເຂົາຈະຖາມເຈົ້າວ່າ, ‘ດ້ວຍເຫດໃດເຈົ້າຈຶ່ງໂອ່ຍຄາງ?’ ແລ້ວເຈົ້າຈະເວົ້າວ່າ, ‘ເພາະເລື່ອງຂ່າວທີ່ຈະມາເຖິງ, ຫົວໃຈທຸກ
ດວງຈະອ່ອນເພຍລົງ, ແລະ ມືທຸກມືສັ່ນ! ບັນດາຈິດວິນຍານຈະຢ້ານກົວ, ແລະ ທຸກຫົວເຂົ່າຈະອ່ອນເພຍລົງເໝືອນດັ່ງນ້ຳ. ເບິ່ງແມ໋! ຂ່າວນັ້ນ
ກຳລັງມາເຖິງ ແລະ ມັນຈະເປັນຢ່າງນີ້! — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'"
[8]ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[9]“ບຸດແຫ່ງມະນຸດເອີຍ, ຈົ່ງທຳນວາຍ ແລະ ກ່າວວ່າ, 'ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້
ວ່າ: ດາບເຫລັ້ມໜຶ່ງ! ໄດ້ຖືກຝົນໃຫ້ແຫລມຄົມ ແລະ ຂັດໃຫ້ເຫລື້ອມແລ້ວ!
[10]ມັນໄດ້ຖືກຝົນໃຫ້ແຫລມຄົມ ເພື່ອເອົາໄປໃຊ້ໃນການຂ້າຄັ້ງໃຫຍ່! ມັນຖືກຂັດໃຫ້ເຫລື້ອມເໝືອນແສງຟ້າແມບ! ພວກເຮົາຄວນຈະຊື່ນ-
ຊົມຍິນດີໃນໄມ້ຄະທາແຫ່ງລູກຊາຍຂອງເຮົາຫລື? ດາບທີ່ຈະມາເຖິງນັ້ນ ກຽດຊັງໄມ້ຢ່າງນັ້ນ![11]ເພາະສະນັ້ນ ດາບຈະຖືກຝົນໃຫ້ແຫລມຄົມ,
ແລ້ວຖືກກຳໃຫ້ໝັ້ນໃນມື! ດາບຖືກຝົນໃຫ້ແຫລມຄົມ ແລະ ຖືກຂັດໃຫ້ເປັນເງົາແລ້ວ ຖືກມອບໄວ້ໃນມືຂອງຜູ້ຂ້າຄົນ!'
[12]ບຸດແຫ່ງມະນຸດເອີຍ, ຈົ່ງຮ້ອງຂໍຄວາມຊ່ວຍເຫລືອ ແລະຮ້ອງໂສກເສົ້າສາ! ເພາະດາບນັ້ນຈະມາຕໍ່ສູ້ປະຊາຊົນຂອງເຮົາ! ມັນຕໍ່ສູ້ກັບບັນດາເຈົ້າ
ນາຍທັງຫລາຍຂອງອິດສະຣາເອນ. ພວກເຂົາຕົກເປັນເຫຍື່ອຄົມດາບພ້ອມກັບປະຊາຊົນຂອງເຮົາ. ສະນັ້ນຈົ່ງຕີກົກຂາຂອງຕົນສາ![13]ເພາະມີ-
ການທົດລອງ, ແຕ່ຫາກຄະທາບໍ່ຄົງຢູ່ຕໍ່ຢ່າງນັ້ນຫລື? — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
[14]ບັດນີ້, ບຸດແຫ່ງມະນຸດເອີຍ, ຈົ່ງກ່າວຄຳທຳນວາຍ ແລະ ຈົ່ງຕົບມືຂອງເຈົ້າ, ເພື່ອດາບນັ້ນຈະຟາດຟັນລົງຄັ້ງທີສາມ! ມັນຈະເປັນດາບເພື່ອເຂັ່ນ
ຂ້າ! ຄືເປັນດາບສຳລັບການເຂັ່ນຂ້າ, ຟາດຟັນພວກເຂົາທຸກທີ່ທຸກບ່ອນ.
[15]ເພື່ອວ່າຫົວໃຈຂອງເຂົາຈະລະລາຍໄປດ້ວຍຄວາມຢ້ານກົວ ແລະ ຜູ້ຄົນລົ້ມຕາຍເປັນທະວີຄູນ, ເຮົາໄດ້ຕັ້ງດາບນັ້ນໄວ້ທີ່ປະຕູທຸກບານ! ວິບັດ!
ມັນຖືກເປັ່ງປະກາຍດັ່ງສາຍຟ້າແມບ, ມັນຖືກຕັ້ງໃຫ້ມີອິດສະຫລະໃນການຂ້າຟັນ.[16]ເຈົ້າ, ດາບເອີຍ! ຈົ່ງຟັນໄປທາງຂວາ! ແລ້ວຟັນໄປທາງຊ້າຍ!
ໄປທຸກທາງທີ່ໜ້າເຈົ້າຫັນໄປ.[17]ເພາະເຮົາເອງ ກໍຈະຈັບມືຂອງເຮົາເຂົ້າດ້ວຍກັນ, ແລະ ເຮົາຈະນຳຄວາມໂກດຮ້າຍຂອງເຮົາໄປເຖິງຄົນທີ່ເຫລືອ!
ເຮົາ, ແມ່ນພຣະຢາເວໄດ້ລັ່ນຄຳເວົ້າແລ້ວ!”
[18]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ອີກວ່າ,[19]“ບັດນີ້, ບຸດແຫ່ງມະນຸດເອີຍ, ຈົ່ງແຕ້ມຖະໜົນສອງເສັ້ນໃຫ້ດາບແຫ່ງກະສັດບາບີໂລນ
ເຂົ້າມາໄດ້. ຖະໜົນສອງເສັ້ນນັ້ນເລີ່ມຕົ້ນຈາກແຜ່ນດິນດຽວກັນ ແລະ ປ້າຍບອກທາງອັນໜຶ່ງຈະບອກທາງໄປສູ່ຕົວເມືອງ.
[20]ຈົ່ງເຮັດເຄື່ອງໝາຍອີກເສັ້ນທາງໜຶ່ງສຳລັບບອກທາງກອງທັບຂອງບາບີໂລນທີ່ຈະໄປຍັງເມືອງຣັບບາແຫ່ງຄົນອຳໂມນ.
ຈົ່ງເຮັດເຄື່ອງໝາຍອີກເສັ້ນທາງໜຶ່ງໄປຍັງກອງທັບຂອງຢູດາແຫ່ງນະຄອນເຢຣູຊາເລັມ ຊຶ່ງມີປ້ອມປະການ.
[21]ເພາະວ່າກະສັດບາບີໂລນຈະຢຸດຢູ່ທີ່ທາງແຍກ, ຢູ່ທາງແຍກ, ເພື່ອເຝິກການທຳນວາຍ. ເຂົາແກວ່ງລູກທະນູ ແລະ ຖາມທາງຈາກຮູບເຄົາລົບ
ທັງຫລາຍ ແລະ ເຂົາຈະຜ່າຕັດຕັບ.[22]ໃນມືເບື້ອງຂວາຂອງເຂົາຈະມີລາງບອກເຫດກ່ຽວກັບນະຄອນເຢຣູຊາເລັມ, ເພື່ອຈະຕັ້ງເຄື່ອງກັບດັກທຳ-
ລາຍມັນ, ເພື່ອຈະໃຫ້ອ້າປາກຂອງເຂົາສັ່ງທຳລາຍລ້າງ, ເພື່ອສົ່ງສຽງສົງຄາມ, ເພື່ອວາງກັບດັກທຳລາຍປະຕູເມືອງທັງຫລາຍ, ເພື່ອສ້າງ
ທາງລາດ, ແລະ ເພື່ອກໍ່ຫໍຄອຍອ້ອມ.[23]ເບິ່ງຄືເປັນຄຳທຳນວາຍທີ່ບໍ່ມີປະໂຫຍດ ໃນສາຍຕາຄົນເຢຣູຊາເລັມ,
ຄືຄົນພວກນັ້ນທີ່ເຄີຍສາບານກັບຊາວບາບີໂລນ! ແຕ່ກະສັດ ຈະກ່າວໂທດເຂົາທີ່ລະເມີດສົນທິສັນຍາ ເພື່ອອ້ອມພວກເຂົາໄປ.
[24]ສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະວ່າພວກເຈົ້າໄດ້ເຮັດໃຫ້ເຮົາລະນຶກເຖິງການຊົ່ວຮ້າຍຂອງພວກເຈົ້າ,
ການລະເມີດທັງຫລາຍໄດ້ຖືກເປີດເຜີຍອອກ! ການບາບຂອງເຈົ້າຫລາຍຈະຖືກປາກົດແຈ້ງໃນການກະທຳທັງໝົດຂອງເຈົ້າ! ເພາະເຫດນັ້ນ ເຈົ້າ
ຈຶ່ງຕ້ອງເຕືອນທຸກຄົນວ່າ ເຈົ້າຈະຖືກຈັບໄປດ້ວຍມືຂອງສັດຕູ!
[25]ແລະເຈົ້າ, ໂອ ຜູ້ປົກຄອງແຫ່ງອິດສະຣາເອນທີ່ຊົ່ວຮ້າຍ ແລະ ເລວຊາມເອີຍ, ວັນແຫ່ງການພິພາກສາລົງໂທດຂອງເຈົ້າມາເຖິງແລ້ວ,
ແລະເວລາແຫ່ງການກະທຳຊົ່ວໝົດລົງແລ້ວ,[26]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຈົ່ງຖອດຜ້າຄຽນຫົວ ແລະ ຖອດມົງກຸດອອກ
ເສຍ! ສິ່ງຕ່າງໆຈະບໍ່ຄົງຢູ່ເໝືອນທີ່ເຄີຍເປັນ! ໃຫ້ຍົກຍ້ອງຄົນທີ່ຕ່ຳຂຶ້ນ ແລະ ໃຫ້ກົດຄົນທີ່ສູງໃຫ້ຕ່ຳລົງ![27]ຈົ່ງພັງທະລາຍ! ຈົ່ງພັງທະລາຍ! ເຮົາ
ຈະເຮັດໃຫ້ມັນພັງທະລາຍ! ມັນຈະບໍ່ຖືກບູລະນະ ຈົນກວ່າຜູ້ທີ່ໄດ້ຮັບມອບໝາຍ ໃຫ້ດຳເນີນການພິພາກສາມາ.
[28]ດັ່ງນັ້ນ, ບຸດແຫ່ງມະນຸດເອີຍ, ຈົ່ງປະກາດຄຳທຳນວາຍແລະ ກ່າວວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ກ່ຽວກັບຄົນອຳໂມນ ແລະ
ກ່ຽວກັບຄວາມອັບອາຍຂອງເຂົາທີ່ກຳລັງຈະມາ: ດາບເຫລັ້ມໜຶ່ງ, ຖືກຖອດອອກ! ມັນຖືກຂັດເພື່ອການຂ້າຟັນ, ດັ່ງນັ້ນ
ມັນຖືກຂັດໃຫ້ເຫລື້ອມເໝືອນຟ້າແມບ![29]ຂະນະທີ່ຜູ້ທຳນວາຍເຫັນນິມິດວ່າງເປົ່າແກ່ເຈົ້າ, ຂະນະທີ່ພວກເຂົາໄດ້ເຮັດພິທີການ
ທີ່ມີແຕ່ການຕົວະແກ່ເຈົ້າ, ດາບນີ້ກໍຈະວາງເທິງຄໍຂອງຄົນຊົ່ວ ຜູ້ທີ່ຈະຖືກຂ້າ, ວັນເວລາແຫ່ງການລົງໂທດໄດ້ມາເຖິງແລ້ວ ແລະ ວັນແຫ່ງຄວາມ
ຊົ່ວຊ້າຈະສິ້ນສຸດລົງແລ້ວ.
[30]ຈົ່ງໃຫ້ດາບກັບເຂົ້າຝັກ ໃນບ່ອນທີ່ເຈົ້າສ້າງຂຶ້ນ, ໃນແຜ່ນດິນດັ້ງເດີມຂອງເຈົ້າ, ເຮົາຈະພິພາກສາເຈົ້າ.[31]ເຮົາຈະຖອກເທຄວາມຄຽດຮ້າຍຂອງ
ເຮົາເໜືອເຈົ້າ! ເຮົາຈະພົ່ນໄຟແຫ່ງຄວາມພິໂລດຂອງເຮົາເໜືອນເຈົ້າ ແລະ ເຮົາຈະມອບເຈົ້າໄວ້ໃນມືຂອງຄົນໃຈໂຫດ, ຜູ້ມີຝີມືໃນການທຳ-
ລາຍລ້າງ!
[32]ເຈົ້າຈະເປັນເຊື້ອເພີງສຳລັບໄຟ! ເລືອດຂອງເຈົ້າຈະຢູ່ກາງແຜ່ນດິນ. ຈະບໍ່ມີໃຜຈົດຈຳເຈົ້າໄວ້, ເພາະເຮົາແມ່ນພຣະຢາເວໄດ້ປະກາດໄວ້ດັ່ງນີ້!'"

 generated on Tue Jun 17 19:01:42 2025

# 22

1แล้ว ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,2ບັດນີ້, ບຸດແຫ່ງມະນຸດເອີຍ, ເຈົ້າຈະພິພາກສາບໍ? ເຈົ້າຈະພິພາກສາເມືອງທີ່ເປິ-
ເປື້ອນດ້ວຍເລືອດນັ້ນບໍ? ຈົ່ງບອກໃຫ້ເມືອງນີ້ໄດ້ຮູ້ເຖິງພຶດຕິກຳອັນຫນ້າກຽດຊັງທັງຫລາຍຂອງເມືອງນັ້ນ.3ເຈົ້າຈົ່ງກ່າວວ່າ, 'ພຣະຢາເວ ອົງ-
ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ນີ້ເປັນເມືອງທີ່ຫລັ່ງເລືອດໃນທ່າມກາງເມືອງນັ້ນ ເພື່ອເວ-
ລາຂອງເມືອງນັ້ນຈະມາເຖິງ; ຄືເມືອງນັ້ນທີ່ເຮັດຮູບເຄົາລົບ ແລະປ່ອຍຕົນໃຫ້ເປັນມົນທິນ.

4ເຈົ້າມີຄວາມຜິດດ້ວຍເລືອດທີ່ເຈົ້າຫລັ່ງອອກມາ, ແລະ ເຈົ້າໄດ້ເຮັດໃຫ້ເປັນມົນທິນດ້ວຍຮູບເຄົາລົບທີ່ເຈົ້າເຮັດຂຶ້ນມາ. ເພາະເຈົ້າໄດ້ຊັກນຳໃຫ້
ເວລາຂອງເຈົ້າໃກ້ເຂົ້າມາ ແລະ ເຂົ້າໃກ້ປີສຸດທ້າຍຂອງເຈົ້າແລ້ວ. ເພາະສະນັ້ນ ເຮົາຈຶ່ງເຮັດໃຫ້ເຈົ້າຖືກປະນາມທ່າມກາງປະຊາຊາດທັງຫລາຍ
ແລະ ຖືກຫມິ່ນປະຫມາດຕໍ່ສາຍຕາປະເທດທັງຫລາຍ.5ທັງບັນດາຜູ້ທີ່ຢູ່ໃກ້ ແລະ ຢູ່ໄກຈະເຍາະເຍີ້ຍເຈົ້າ, ໂອ ເມືອງທີ່ເປັນມົນທິນເອີຍ,
ຊື່ສຽງຂອງເຈົ້າເປັນທີ່ຮູ້ຈັກກັນໄປທົ່ວທຸກຫົນທຸກແຫ່ງ ເຫມືອນເຕັມໄປດ້ວຍຄວາມສັບສົນວຸ້ນວາຍ.
6ເບິ່ງແມ໋! ຜູ້ປົກຄອງແຫ່ງອິດສະຣາເອນທັງຫລາຍນັ້ນ, ອຳນາດຂອງແຕ່ລະຄົນ, ໄດ້ມາເຖິງເຈົ້າ ເພື່ອເຮັດໃຫ້ເກີດການຫລັ່ງເລືອດ.
7ພວກເຂົາໄດ້ເຮັດໃຫ້ພໍ່ແມ່ເສຍກຽດໃນເຈົ້າ, ແລະ ພວກເຂົາກົດຂີ່ຂົ່ມເຫັງບັນດາຄົນຕ່າງດ້າວທີ່ຢູ່ທ່າມກາງເມືອງ. ພວກເຂົາປະພຶດບໍ່ດີຕໍ່ເດັກ-
ກຳພ້າ ແລະ ແມ່ຫມ້າຍໃນເມືອງນີ້.8ເຈົ້າໄດ້ຫມິ່ນປະຫມາດສິ່ງທີ່ບໍຣິສຸດຂອງເຮົາ ແລະເຮັດໃຫ້ບັນດາວັນສະບາໂຕຂອງເຮົາມົວຫມອງ.
9ພວກນັກຂ້າໄດ້ມາຫາເຈົ້າ ເພື່ອເຮັດໃຫ້ເກີດການຫລັ່ງເລືອດ, ແລະ ເຈົ້າຈະກິນລ້ຽງເທິງພູເຂົາ. ພວກເຂົາເຮັດສິ່ງຊົ່ວຮ້າຍໃນທ່າມກາງເຈົ້າ.
10ການເປືອຍກາຍຂອງພໍ່ ຖືກເປີດເຜີຍໃຫ້ເຈົ້າໄດ້ເຫັນ. ພວກເຂົາໄດ້ຂົ່ມເຫັງຜູ້ຍິງທີ່ເປັນມົນທິນໃນເຈົ້າໃນລະຫວ່າງບໍ່ສະອາດຂອງເຂົາ.
11ຜູ້ຊາຍທີ່ເຮັດສິ່ງທີ່ຫນ້າກຽດຊັງກັບເມຍຂອງເພື່ອນບ້ານ, ແລະ ຜູ້ຊາຍທີ່ຂົ່ມຂືນລູກໄພ້ຂອງຕົນຢ່າງຫນ້າລະອາຍ;
ຜູ້ຊາຍທີ່ລ່ວງເກີນເອື້ອຍນ້ອງ—ລູກສາວຮ່ວມພໍ່ດຽວຂອງຕົນ — ຄົນເຫລົ່ານີ້ຕ່າງຢູ່ທ່າມກາງເຈົ້າ.12ຊາຍທັງຫລາຍເຫລົ່ານີ້ທີ່ຮັບສິນ-
ບົນທ່າມກາງເຈົ້າ ເພື່ອເຮັດໃຫ້ຫລັ່ງເລືອດ. ເຈົ້າເອົາດອກເບ້ຍ ແລະ ຫາກຳໄລຫລາຍເກີນໄປ. ເຈົ້າໄດ້ທຳລາຍເພື່ອນບ້ານຂອງເຈົ້າໂດຍການບີບ
ບັງຄັບ ແລະ ເຈົ້າໄດ້ຫລົງລືມເຮົາເສຍ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
13ເບິ່ງແມ໋! ດ້ວຍມືຂອງເຮົາ ເຮົາຈະຕີເຈົ້າເນື່ອງຈາກຜົນກຳໄລອະທຳທີ່ເຈົ້າໄດ້ເຮັດ, ແລະ ການຫລັ່ງເລືອດໃນທ່າມກາງຂອງເຈົ້າ.14ໃຈເຈົ້າຈະ
ອົດທົນ, ແລະ ມືຂອງເຈົ້າຈະແຂງແຮງ ໃນວັນທີ່ເຮົາຈະລົງໂທດເຈົ້າໄດ້ບໍ? ເຮົາ, ແມ່ນພຣະຢາເວໄດ້ປະກາດສິ່ງນີ້ແລ້ວ, ແລະ ເຮົາຈະເຮັດຕາມ
ນັ້ນ.15ດັ່ງນັ້ນ ເຮົາຈະໃຫ້ພວກເຈົ້າກະຈັດກະຈາຍໄປໃນທ່າມກາງປະຊາຊາດຕ່າງໆ ແລະ ໃຫ້ເຈົ້າກະຈາຍໄປທົ່ວດິນແດນຕ່າງໆ. ໃນວິທີນີ້, ເຮົາ
ຈະຊຳຣະລ້າງຄວາມເປິະເປື້ອນອອກຈາກເຈົ້າເສຍ.16ດັ່ງນັ້ນ ເມື່ອເຈົ້າເປັນສິ່ງທີ່ບໍ່ບໍຣິສຸດໃນສາຍຕາຂອງປະຊາຊາດທັງຫລາຍ. ແລ້ວເຈົ້າຈະຮູ້-
ວ່າ ເຮົາແມ່ນພຣະຢາເວ."
17ຕໍ່ມາ ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,18"ບຸດແຫ່ງມະນຸດເອີຍ, ເຊື້ອສາຍອິດສະຣາເອນກາຍ-
ເປັນຂີ້ເຫຍື້ອສຳລັບເຮົາ. ພວກມັນທັງຫມົດເປັນຂີ້ທອງເຫລືອງ, ຂີ້ກົ່ວ, ເຫລັກເສດ ໃນທ່າມກາງພວກເຈົ້າ. ພວກເຂົາເປັນເສດ
ເງິນໃນເຕົາຫລອມຂອງເຈົ້າ.19ເພາະສະນັ້ນ ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, ' ເພາະວ່າ ພວກເຈົ້າທັງຫມົດເປັນເຫມືອນ
ຂີ້ເຫຍື້ອ,' ດັ່ງນັ້ນ, ບິ່ງແມ໋! ເຮົາຈະຮວບຮວມເຈົ້າໄວ້ທ່າມກາງນະຄອນເຢຣູຊາເລັມ.
20ເຫມືອນກັບການຮວບຮວມເງິນ, ທອງເຫລືອງ, ເຫລັກ, ຊືນ ແລະ ກົ່ວ ທ່າມກາງເຕົາຫລໍ່ ເພື່ອໃຫ້ໄຟເຜົາໃຫ້ມັນລະລາຍ,
ເຮົາຈະເຮັດໃຫ້ເຈົ້າລະລາຍ. ສະນັ້ນ, ເຮົາຈະຮວບຮວມພວກເຈົ້າດ້ວຍ ຄວາມໂກດຮ້າຍ ແລະ ດ້ວຍຄວາມພິໂລດຂອງເຮົາ. ເຮົາຈະ
ວາງເຈົ້າໄວ້ບ່ອນນັ້ນ ແລະ ເປົ່າໄຟໃສ່ເຈົ້າໃຫ້ລະລາຍ; ດັ່ງນັ້ນ ເຮົາຈະຮວບຮວມພວກເຈົ້າດ້ວຍຄວາມຄຽດຮ້າຍ ແລະ ດ້ວຍຄວາມພິໂລດ,
ແລະ ວາງເຈົ້າໃສ່ບ່ອນນັ້ນ ແລະ ຈະຖອກເທເຈົ້າອອກ.21ເຮົາຈະຮວບຮວມເຈົ້າ ແລະ ເປົ່າຕໍ່ສູ້ເຈົ້າດ້ວຍໄຟແຫ່ງຄວາມພິໂລດຂອງເຮົາ ເພື່ອເຈົ້າ
ຈະຖືກຖອກເທອອກຈາກທ່າມກາງເມືອງນັ້ນ.22ຖ້າເງິນຖືກຫລໍ່ທ່າມກາງເຕົາໄຟ, ເຈົ້າຈະຖືກລະລາຍຢູ່ທ່າມກາງມັນ, ແລະ ເຈົ້າຈະຮູ້ວ່າ ເຮົາ,
ແມ່ນພຣະຢາເວ, ໄດ້ຖອກຄວາມຄຽດຮ້າຍຂອງເຮົາລົງເຫນືອພວກເຈົ້າ!"
23ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,24"ບຸດແຫ່ງມະນຸດເອີຍ, ຈົ່ງກ່າວກັບແຜ່ນດິນນັ້ນວ່າ ' ເຈົ້າເປັນແຜ່ນດິນທີ່ບໍ່ໄດ້ຮັບການຊຳ-
ລະໃຫ້ສະອາດ. ຝົນຈະບໍ່ຕົກໃນວັນແຫ່ງພຣະພິໂລດ!25ມີການສົມຮູ້ຮ່ວມຄິດຂອງຜູ້ທຳນວາຍໃນທ່າມກາງເຂົາ, ເຫມືອນໂຕສິງຄຳລາມ ແລະ
ຈີກເຫຍື່ອຢູ່. ພວກເຂົາກິນຊີວິດຜູ້ຄົນ ແລະ ປຸ້ນຊັບສິ່ງຂອງທີ່ມີຄ່າໄປ; ພວກເຂົາໄດ້ເຮັດໃຫ້ເກີດມີແມ່ຫມ້າຍຢ່າງຫລວງຫລາຍໃນທ່າມກາງ
ແຜ່ນດິນນັ້ນ!
26ປະໂລຫິດຂອງພວກເຂົາໄດ້ລະເມີດພຣະບັນຍັດຂອງເຮົາ,ແລະ ພວກເຂົາຫມິ່ນປະຫມາດສິ່ງບໍຣິສຸດຂອງເຮົາ. ພວກເຮົາບໍ່ໄດ້ແຍກແຍະ
ລະຫວ່າງ ບັນດາສິ່ງຂອງບໍຣິສຸດ ແລະ ສິ່ງຂອງທີ່ບໍ່ບໍຣິສຸດ, ແລະ ບໍ່ໄດ້ສອນເຖິງຄວາມແຕກຕ່າງ ລະຫວ່າງສິ່ງທີ່ສະອາດ ແລະ ສິ່ງທີ່ເປັນມົນ-
ທິນ. ພວກເຂົາໄດ້ລີ້ຈາກບັນດາວັນສະບາໂຕຂອງເຮົາ ເພື່ອໃຫ້ເຮົາຖືກຫມິ່ນປະຫມາດທ່າມກາງພວກເຂົາ.27ບັນດາເຈົ້າຊາຍໃນທ່າມກາງແຜ່ນ-
ດິນເປັນເຫມືອນຫມາປ່າທີ່ຈີກຊີ້ນຂອງເຫຍື່ອຂອງພວກມັນອອກ. ພວກເຂົາເຮັດໃຫ້ເກີດການຫລັ່ງເລືອດ ແລະ ທຳລາຍຊີວິດ, ເພື່ອຈະເອົາກຳ-
ໄລອັນບໍ່ສັດຊື່28ບັນດາຜູ້ທຳນວາຍທັງຫລາຍກໍໄດ້ໂບກຕົນເອງດ້ວຍປູນຂາວ; ພວກເຂົາເຫັນນິມິດບໍ່ຈິງ ແລະ ຄຳທຳນວາຍຂີ້ຕົວະແກ່ພວກເຂົາ.
ພວກເຂົາກ່າວວ່າ, "ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້" ທັງທີ່ພຣະຢາເວບໍ່ໄດ້ກ່າວເລີຍ.
29ປະຊາຊົນແຫ່ງແຜ່ນດິນບີບບັງຄັບ ແລະ ຍາດຊິງເອົາສິ່ງຂອງຜ່ານການປຸ້ນ. ແລະ ພວກເຂົາບີບບັງຄັບຄົນຍາກຈົນ ແລະ ຄົນຂັດສົນ, ແລະ
ບີບບັງຄັບຄົນຕ່າງດ້າວໂດຍປາສາຈາກຄວາມຍຸດຕິທຳ.
30ດັ່ງນັ້ນ ເຮົາໄດ້ສະແຫວງຫາຜູ້ຊາຍຈັກຄົນຫນຶ່ງໃນພວກເຂົາ ຊຶ່ງກໍ່ກຳແພງຂຶ້ນ ແລະ ຢືນຢູ່ຕໍ່ຫນ້າເຮົາ ເພື່ອຊຳຣະແຜ່ນດິນນັ້ນໃຫ້ສະອາດ
ແລະ ເຮົາຈະບໍ່ໄດ້ທຳລາຍມັນ, ແຕ່ກໍຫາບໍ່ໄດ້ຈັກຄົນດຽວເລີຍ.31ສະນັ້ນ ເຮົາຈຶ່ງຖອກຄວາມຄຽດຮ້າຍຂອງເຮົາລົງເຫນືອພວກເຂົາ.
ເຮົາຈະເຮັດໃຫ້ພວກເຂົາຈົບສິ້ນດ້ວຍແປວໄຟແຫ່ງຄວາມພິໂລດຂອງເຮົາ ແລະ ເຮັດໃຫ້ສິ່ງທັງປວງທີ່ເຂົາໄດ້ເຮັດນັ້ນຕົກເທິງຫົວຂອງພວກເຂົາ
— ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.""

23 1ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2"ບຸດແຫ່ງມະນຸດເອີຍ, ມີຜູ້ຍິງສອງຄົນ ເປັນລູກສາວແມ່ດຽວກັນ. 3
ຂະເຈົ້າເຮັດຄືຍິງໂສເພນີໃນເອຢິບ ຕັ້ງແຕ່ຍັງເປັນຫນຸ່ມ. ຂະເຈົ້າເຮັດຄືຍິງໂສເພນີຢູ່ທີ່ນັ້ນ. ຫນ້າອົກຂອງພວກເຂົາ ຖືກບີບ ແລະ
ຫົວນົມພົມມະຈາລີຂອງເຂົາຖືກລູບຄຳຢູ່ທີ່ນັ້ນ. 4ຊື່ຂອງພວກເຂົາແມ່ນ ໂອໂຮລາ — ຜູ້ເອື້ອຍ — ແລະ ໂອໂຮລີບາ — ຜູ້ນ້ອງສາວ. ທັງສອງ
ຄົນໄດ້ກາຍມາເປັນຂອງເຮົາ ແລະໄດ້ເກີດລູກຊາຍ ແລະ ລູກສາວ. ຊື່ຂອງພວກເຂົາມມີຄວາມຫມາຍວ່າ: ໂອໂຮລາ ຫມາຍເຖິງຊາມາເຣຍ,
ແລະ ໂອໂຮລີບາຫມາຍເຖິງ ເຢຣູຊາເລັມ.

5ແຕ່ໂອໂຮລາເຮັດຕົນເປັນໂສເພນີ ເຖິງວ່າ ເມື່ອນາງເປັນຂອງເຮົາແລ້ວກໍຕາມ. ນາງຫລົງໄຫລໄປນຳພວກຄົນຮັກຂອງນາງ, ຄືຊາວອັດຊີ-
ເຣຍຊຶ່ງເປັນຜູ້ມີອິນທິພົນ, 6ເຈົ້າເມືອງແຕ່ງກາຍດ້ວຍຜ້າສີມ່ວງ, ແລະ ສຳລັບທາງຣາຊະການ, ຊຶ່ງເປັນຜູ້ແຂງແຮງ ແລະ ຮູບງາມ,
ພວກເຂົາທຸກຄົນຂີ່ມ້າ. 7ດັ່ງນັ້ນ ນາງໄດ້ສະເຫນີຕົນເອງໃຫ້ແກ່ພວກເຂົາເຫມືອນຢ່າງໂສເພນີ, ໃຫ້ແກ່ຜູ້ຊາຍຊັ້ນສູງຂອງອັດຊີເຣຍທຸກຄົນ, ແລະ
ນາງກໍເຮັດຕົນໃຫ້ເປັນມົນທິນກັບທຸກຄົນທີ່ນາງໄດ້ນອນນຳ — ແລະ ຮູບເຄົາລົບທັງຫມົດຂອງພວກເຂົາ.
8ເພາະນາງບໍ່ໄດ້ລະຄວາມປະພຶດການເປັນໂສເພນີຕັ້ງແຕ່ຢູ່ເອຢິບ, ພວກເຂົາໄດ້ນອນນຳນາງ ເມື່ອນາງຍັງສາວ, ພວກເຂົາຈັບຕ້ອງຫນ້າເອິກພົມ-
ມະຈາລີຂອງນາງ ແລະ ຖອກເທລາຄະຕັນຫາຂອງເຂົາໃຫ້ແກ່ນາງ. 9ເພາະສະນັ້ນ ເຮົາຈຶ່ງມອບນາງໃຫ້ຕົກຢູ່ໃນມືຂອງພວກຄົນຮັກຂອງນາງ, ຄື
ໃນມືຄົນອັດຊີເຣຍຊຶ່ງນາງຫລົງໄຫລນັ້ນ. 10ພວກເຂົາໄດ້ເຜີຍຄວາມເປືອຍກາຍຂອງນາງ. ພວກເຂົາຈັບລູກຊາຍ ແລະ ລູກຍິງຂອງນາງ, ແລະ
ພວກເຂົາຂ້ານາງດ້ວຍຄົມດາບ, ແລະ ນາງຈຶ່ງກາຍເປັນຄົນຫນ້າອັບອາຍແກ່ຜູ້ຍິງຄົນອື່ນໆ, ດັ່ງນັ້ນ ພວກເຂົາໄດ້ພິພາກສາລົງໂທດນາງແລ້ວ.
11ເມື່ອໂອໂຮລີບານ້ອງສາວຂອງນາງເຫັນເຊັ່ນນັ້ນ, ນາງກໍມີລາຄະຕັນຫາຢ່າງແຮງກ້າຫລາຍກວ່າເອື້ອຍ ແລະ ປະພຶດຕົນເປັນໂສເພນີຫລາຍ-
ກວ່າເອື້ອຍອີກ. 12ນາງຫລົງໄຫລອັດຊີເຣຍ, ທັງພວກເຈົ້າເມືອງ ແລະ ພວກຂ້າຣາຊການຊັ້ນສູງ, ຜູ້ແຕ່ງຕົວສົມຍົດ, ຄືຄົນເຫລົ່ານັ້ນທີ່ຂີ່ເທິງຫລັງ
ມ້າ. ພວກເຂົາທຸກຄົນເປັນຊາຍຫນຸ່ມທີ່ແຂງແຮງ ແລະ ຮູບງາມ. 13ເຮົາໄດ້ເຫັນນາງເຮັດຕົນໃຫ້ເປັນມົນທິນ. ທັງສອງເອື້ອຍນ້ອງກໍເປັນແບບດຽວ
ກັນ.
14ແຕ່ນາງກໍຍິ່ງເພີ່ມພຶດຕິກຳໂສເພນີຫລາຍຂຶ້ນ. ເມື່ອນາງເຫັນຜູ້ຊາຍແກະສະລັກຢູ່ເທິງຝາ ແລະ ແກະສະລັກຮູບຂອງຄົນບາບີໂລນທີ່ແຕ້ມດ້ວຍ
ສີແດງເຂັ້ມ, 15ໃສ່ເຂັມຂັດຮັດແອວຂອງພວກເຂົາ, ມີຜ້າຄຽນຫົວຫ້ອຍຢູ່ເທິງຫົວຂອງພວກເຂົາ. ທຸກຄົນມີລັກສະນະເຫມືອນກັບນາຍທະ-
ຫານລົດມ້າ, ເຫມືອນກັບບັນດາລູກຊາຍຂອງຊາວບາບີໂລນ, ຊຶ່ງແຜ່ນດິນເດີມຂອງເຂົາຄືບາບີໂລນ.
16ທັນທີທີ່ສາຍຕາຂອງນາງເຫັນຮູບຮ່າງພວກເຂົາ, ນາງກໍຫລົງໄຫລໃນພວກເຂົາແລ້ວ, ດັ່ງນັ້ນ ນາງໄດ້ສົ່ງຂ່າວໄປຫາພວກເຂົາທີ່ບາບີໂລນ. 17ຊາວ
ບາບີໂລນໄດ້ມາຫານາງເຖິງຕຽງຮັກ ແລະ ພວກເຂົາກໍເຮັດໃຫ້ນາງເປັນມົນທິນດ້ວຍລາຄະຕັນຫາຂອງພວກເຂົາ. ດ້ວຍສິ່ງທີ່ນາງໄດ້ກະທຳ,
ນາງໄດ້ເປັນມົນທິນ, ດັ່ງນັ້ນ ນາງຈຶ່ງຫັນເຫອອກໄປຈາກພວກເຂົາດ້ວຍຄວາມເບື່ເບື່ອນ.
18ເມື່ອນາງໄດ້ເຜີຍຕົນເຫມືອນເປັນໂສເພນີ ແລະ ນາງໄດ້ເຜີຍຮ່າງກາຍອັນເປືອຍຂອງນາງ, ດັ່ງນັ້ນ ວິນຍານຂອງເຮົາກໍຫັນຫລັງໄປຈາກນາງ,
ເຫມືອນຢ່າງທີ່ວິນຍານຂອງເຮົາໄດ້ແຍກຈາກເອື້ອຍຂອງນາງໄປ. 19ແລ້ວນາງໄດ້ເພີ່ມທະວີການປະພຶດເປັນໂສເພນີຫລາຍຂຶ້ນ, ໂດຍນຶກເຖິງເມື່ອ
ຄາວທີ່ນາງຍັງເປັນສາວຢູ່, ເມື່ອນາງເຮັດຕົນເປັນເຫມືອນໂສເພນີຢູ່ໃນແຜ່ນດິນເອຢິບ.
20ດັ່ງນັ້ນ ນາງໄດ້ຫລົງໄຫລຊູ້ຮັກຂອງນາງ, ອະໄວຍະວະຂອງພວກເຂົາເຫມືອນກັບຂອງພວກລາ, ແລະ
ການຫລັ່ງນ້ຳກາມຂອງເຂົານັ້ນກໍເຫມືອນຂອງມ້າ. 21ນີ້ຄືການກະທຳອັນຫນ້າອັບອາຍທີ່ເຈົ້າເຮັດໃນເວລາທີ່ເຈົ້າຍັງຫນຸ່ມ, ເມື່ອຄົນເອຢິບຈັບຕ້ອງ
ຫນ້າເອິກຂອງເຈົ້າ ແລະລູບໄຫລ່ຫນ້າເອິກສາວຂອງເຈົ້າ.
22ເພາະສະນັ້ນ, ໂອໂຮລີບາເອີຍ, ພຣະເຢວາ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: "ເບິ່ງແມ່! ເຮົາຈະໃຫ້ຊູ້ຮັກທັງຫລາຍຂອງເຈົ້າຫັນມາຕໍ່ສູ້ເຈົ້າ.
ຄົນເຫລົ່ານັ້ນ ຊຶ່ງເຈົ້າໄດ້ແຍກຈາກໄປນັ້ນ ເຮົາຈະນຳພວກເຂົາມາຕໍ່ສູ້ເຈົ້າຈາກທຸກໆດ້ານ. 23ຊາວບາບີໂລນ ແລະ ຊາວກັນດາທັງຫມົດ, ຊາວເປ-
ໂກດ, ຊາວໂຊອາ ແລະຊາວໂກອາ, ແລະ ລວມທັງຊາວອັດຊີເຣຍທັງຫມົດ, ເປັນຄົນຫນຸ່ມທີ່ແຂງແຮງ ແລະ ຮູບງາມ,
ພວກເຂົາເປັນຂ້າຣາຊະການ, ເຈົ້ານາຍລະດັບສູງ, ພວກເຂົາທຸກຄົນທີ່ຂີ່ມ້າ.
24ພວກເຂົາຈະມາຕໍ່ສູ້ເຈົ້າດ້ວຍອາວຸດທັງຫມົດ, ແລະ ດ້ວຍລົດມ້າຮົບ ແລະ ກວຽນ, ແລະ ພ້ອມຊົນຊາດທັງຫລາຍເປັນຈຳນວນຫລາຍ. ພວກ-
ເຂົາຈະໃຊ້ໂລ່ໃຫຍ່, ໂລ່ນ້ອຍ, ແລະ ຫມວກເຫລັກຕັ້ງຕົນຕໍ່ສູ້ກັບເຈົ້າທຸກດ້ານ. ເຮົາຈະມອບໂອກາດໃຫ້ພວກເຂົາລົງໂທດເຈົ້າ, ແລະ
ພວກເຂົາຈະລົງໂທດເຈົ້າດ້ວຍການກະທຳທັງຫລາຍຂອງເຂົາ. 25ເພາະເຮົາຈະຕັ້ງຄວາມອິດສາຂອງເຮົາເທິງເຈົ້າ, ແລະ ພວກເຂົາຈະເຮັດກັບເຈົ້າ
ດ້ວຍຄວາມໂກດຮ້າຍ. ພວກເຂົາຈະຕັດດັງ ແລະ ຕັດຫູຂອງເຈົ້າອອກເສຍ, ແລະ ພວກເຈົ້າທີ່ລອດຈະລົ້ມລົງດ້ວຍຄົມດາບ. ພວກ-
ເຂົາຈະຈັບລູກຊາຍ ແລະ ລູກສາວທັງຫລາຍຂອງເຈົ້າ, ແລະ ພວກເຈົ້າທີ່ລອດຈະຖືກເຜົາດ້ວຍໄຟ.
26ພວກເຂົາຈະແກ້ເອົາເສື້ອຂອງເຈົ້າອອກ ແລະ ນຳເອົາເຄື່ອງປະດັບງາມໆຂອງເຈົ້າໄປເສຍ. 27ດັ່ງນັ້ນ ເຮົາຈະ-
ເອົາຄວາມອັບອາຍຂອງເຈົ້າອອກຈາກເຈົ້າ ແລະ ຄວາມປະພຶດຢ່າງໂສເພນີຂອງເຈົ້າອອຈາກແຜ່ນດິນເອຢິບ.
ເຈົ້າຈະບໍ່ເງີຍຫນ້າຂຶ້ນເບິ່ງສິ່ງນັ້ນອີກ, ແລະ ເຈົ້າຈະບໍ່ນຶກເຖິງເອຢິບອີກຕໍ່ໄປ.'
28ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ່! ເຮົາຈະມອບເຈົ້າໄວ້ໃນມືຂອງຜູ້ທີ່ເຈົ້າກຽດຊັງ, ກັບໄປຢູ່ໃນມືຂອງຄົນເຫລົ່າ-
ນັ້ນທີ່ເຈົ້າຫັນຫລັງໃຫ້. 29ພວກເຂົາທັງຫລາຍຈະເຮັດກັບເຈົ້າດ້ວຍຄວາມກຽດຊັງ; ແລະ ຈະປຸ້ນເອົາຊັບສົມບັດຂອງເຈົ້າໄປຫມົດ ແລະ ຖິ້ມເຈົ້າ
ໄວ້ໃຫ້ເປືອຍກາຍ ແລະບໍ່ມີເຄື່ອງນຸ່ງ. ການເປືອຍກາຍເປັນຄວາມອັບອາຍ ແລະ ການເປັນໂສເພນີຂອງເຈົ້າຈະຕ້ອງຖືກເປີດເຜີຍ,
ພ້ອມທັງການປະພຶດອັນຫນ້າອັບອາຍ ແລະ ການລາຄະຕັນຫາຂອງເຈົ້າ.
30ສິ່ງເຫລົ່ານີ້ຈະມາເຖິງເຈົ້າ ເພາະເຈົ້າເຮັດຕົນເຫມືອນເປັນໂສເພນີ, ແລະ ຫລົງໄຫລຕໍ່ບັນດາປະຊາຊາດທັງຫລາຍ
ຊຶ່ງເຮັດໃຫ້ເຈົ້າກາຍເປັນມົນທິນກັບບັນດາຮູບເຄົາລົບຂອງພວກເຂົາ. 31ເຈົ້າໄດ້ດຳເນີນຕາມທາງຂອງເອື້ອຍເຈົ້າ, ເພາະສະນັ້ນ ເຮົາຈະມອບ
ຖ້ວຍແຫ່ງການລົງໂທດຂອງນາງໃສ່ໃນມືຂອງເຈົ້າ.'
32ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເຈົ້າຈະຕ້ອງດື່ມຈາກຖ້ວຍຂອງເອື້ອຍເຈົ້າ ຊຶ່ງທັງເລິກ ແລະ ໃຫຍ່. ເຈົ້າຈະກາຍເປັນຄົນທີ່ຖືກ
ເຍາະເຍີ້ຍ ແລະ ຫມິ່ນປະຫມາດ — ເພາະຖ້ວຍນັ້ນເຕັມຫລາຍ.

33ເຈົ້າຈະເຕັມໄປດ້ວຍຄວາມມຶນເມົາ ແລະ ຄວາມໂສກເສົ້າ, ຈອກແຫ່ງຄວາມຫນ້າຢ້ານກົວ ແລະ ໄພພິບັດ; ຈອກແຫ່ງຊາມາເຣຍເອື້ອຍຂອງ
ເຈົ້າ. 34ເຈົ້າຈະດື່ມ ແລະ ເຍັ່ນຈົນຫມົດ; ແລ້ວເຈົ້າຈະເຮັດໃຫ້ມັນແຕກ ແລະ ຈີກຫນ້າເອິກຂອງເຈົ້າເປັນຕ່ອນໆ. ເພາະເຮົາໄດ້ປະກາດແລ້ວ —
ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງປະກາດດັ່ງນີ້ແຫລະ.'
35ເພາະສະນັ້ນ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເພາະເຈົ້າລືມເຮົາ ແລະ ຖິ້ມເຮົາໄວ້ຂ້າງຫລັງເຈົ້າ, ດັ່ງນັ້ນ ເຈົ້າຈຶ່ງຮັບຜົນທີ່ຈະ
ຕາມມາຂອງຄວາມຫນ້າອັບອາຍ ແລະ ການຫລິ້ນຊູ້ຂອງເຈົ້າສາ.'"
36ພຣະຢາເວຊົງກ່າວກັບຂ້ານ້ອຍວ່າ, "ບຸດແຫ່ງມະນຸດເອີຍ, ເຈົ້າຈະພິພາກສາ ໂອໂຮລາ ແລະ ໂອໂຮລີບາຫລື? ດັ່ງນັ້ນ ຈົ່ງປະກາດການກະທຳ
ທີ່ຫນ້າກຽດຊັງທັງຫລາຍຂອງພວກເຂົາໃຫ້ພວກເຂົາຮູ້. 37ເພາະວ່າພວກເຂົາໄດ້ລ່ວງປະເວນີ, ແລະ ເລືອດກໍຢູ່ໃນມືຂອງພວກເຂົາ. ພວກເຂົາໄດ້
ລ່ວງປະເວນີກັບຮູບເຄົາລົບຂອງພວກເຂົາ, ແລະ ພວກເຂົາຍັງຖວາຍລູກຊາຍຂອງພວກເຂົາ
ລຸຍໄຟເພື່ອເປັນອາຫານແກ່ພວກຮູບເຄົາລົບທັງຫລາຍຂອງພວກເຂົາ.
38ແລ້ວພວກເຂົາ ຍັງຄົງສືບຕໍ່ເຮັດເຊັ່ນນີ້ກັບເຮົາອີກ: ພວກເຂົາໄດ້ເຮັດສະຖານນະມັດສະການຂອງເຮົາເປັນມົນທິນ, ແລະ
ໃນວັນດຽວກັນພວກເຂົາໄດ້ໃຫ້ບັນດາສະບາໂຕຂອງເຮົາໃຫ້ເປັນມົນທິນ. 39ຄືເມື່ອພວກເຂົາຂ້າລູກທັງຫລາຍຂອງພວກເຂົາເພື່ອເປັນເຄື່ອງບູຊາ
ຮູບເຄົາລົບຂອງພວກເຂົາ, ຈາກນັ້ນ ພວກເຂົາກໍເຂົ້າມາໃນສະຖານນະມັດສະການຂອງເຮົາ ແລະ ເຮັດໃຫ້ສະຖານທີ່ນັ້ນເປັນມົນທິນ! ດັ່ງນັ້ນ
ເບິ່ງແມ້! ພວກເຂົາໄດ້ເຮັດສິ່ງເຫລົ່ານີ້ໃນທ່າມກາງວິຫານຂອງເຮົາ.
40ພວກເຈົ້າຍັງສົ່ງຄົນໄປຫາຜູ້ຊາຍທີ່ມາຈາກທາງໄກ, ດ້ວຍການໃຊ້ຜູ້ສົ່ງຂ່າວໄປຫາ — ບັດນີ້ ເບິ່ງແມ. ພວກເຂົາກໍໄດ້ມາ,
ຄືຄົນທັງຫລາຍທີ່ເຈົ້າອາບນ້ຳໃຫ້, ເຈົ້າທາຕາຂອງເຈົ້າ, ແລະ ແຕ່ງກາຍຂອງເຈົ້າດ້ວຍເຄື່ອງປະດັບ. 41ເຈົ້ານັ່ງຢູ່ເທິງຕຽງນອນທີ່ສວຍງາມ ແລະ
ຂ້າງຫນ້າມີໂຕະທີ່ວາງໄວ້ພ້ອມ ຊຶ່ງເປັນໂຕະທີ່ເຈົ້າວາງເຄື່ອງຫອມ ແລະ ນ້ຳມັນຂອງເຮົາ.
42ສຽງຂອງປະຊາຊົນກໍດັງຢູ່ອ້ອມຮອບນາງ; ພ້ອມກັບຜູ້ຊາຍທຸກຄົນ, ແມ່ນແຕ່ ພວກເຂົາຄົນຂີ້ເມົາ ກໍຖືກນຳໂຕມາຈາກຖິ່ນແຫ້ງແລ້ງ
ກັນດານທັງຫລາຍ, ແລະ ພວກເຂົາໄດ້ເອົາສາຍແຂນສຸບໃສ່ມືຂອງພວກເຂົາ ແລະ ສຸບມົງກຸດງາມໆເທິງຫົວຂອງພວກເຂົາ.
43ແລ້ວເຮົາໄດ້ກ່າວເລື່ອງນາງວ່າ ຜູ້ທີ່ໄດ້ລ່ວງປະເວນີ, 'ບັດນີ້ ພວກເຂົາຈະເຮັດຜິດສິນລະທຳທາງເພດກັບນາງ, ແລະ ນາງກໍຈະຮ່ວມກັບພວກ
ເຂົາ.' 44ພວກເຂົາເຫລົ່ານັ້ນເຂົ້າໄປຫານາງ ແລະ ຮ່ວມຫລັບນອນກັບນາງ ເຫມືອນຢ່າງຜູ້ຊາຍທີ່ໄປນອນກັບຍິງເປັນໂສເພນີ. ດ້ວຍວິທີນີ້ ພວກ-
ເຂົາຫລັບນອນກັບ ໂອໂຮລາແລະ ໂອໂຮລີບາ, ຊຶ່ງເປັນຜູ້ຍິງຜິດສິນລະທຳ. 45ແຕ່ຄົນຊອບທຳຈະພິພາກສາພວກນາງດ້ວຍຄຳພິພາກສາອັນຄວນ
ແກ່ຍິງຜູ້ລ່ວງປະເວນີ, ແລະ ພວກເຂົາຈະພິພາກສາພວກນາງດ້ວຍຄຳພິພາກສາອັນຄວນແກ່ຍິງຜູ້ເຮັດໃຫ້ຄົນເລືອດຕົກ, ເພາະພວກນາງເປັນຍິງ
ລ່ວງປະເວນີ ແລະ ມືຂອງພວກນາງ ກໍເປື້ອນເລືອດ.
46ດັ່ງນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະນຳກອງທັບມາຕໍ່ສູ້ພວກນາງ ແລະ ເຮົາຈະມອບພວກນາງໄວ້ແກ່ຄວາມໂກດ
ຮ້າຍ ແລະ ການຖືກປຸ້ນ. 47ແລ້ວກອງທັບຈະເອົາກ້ອນຫີນແກວ່ງໃສ່ພວກນາງ ແລະ ຟັນພວກນາງດ້ວຍດາບ. ພວກເຂົາຈະຂ້າລູກຊາຍ ແລະ
ລູກສາວຂອງພວກນາງ ແລະ ເຜົາເຮືອນທັງຫລາຍຂອງພວກນາງ.
48ດັ່ງນີ້ແຫລະ ເຮົາຈະເອົາຄວາມປະພຶດອັນຫນ້າອັບອາຍອອກຈາກແຜ່ນດິນ ແລະ ຕັກເຕືອນພວກຜູ້ຍິງທັງຫລາຍ ເພື່ອພວກນາງ
ຈະບໍ່ເຮັດຕົນເຫມືອນໂສເພນີ. 49ດັ່ງນັ້ນ ພວກເຂົາຈະຕັ້ງຄວາມປະພຶດທີ່ຫນ້າອັບອາຍຂອງພວກເຈົ້າມາຕໍ່ສູ້ເຈົ້າ.
ເຈົ້າຈະແບກຮັບຄວາມຜິດບາບຂອງເຈົ້າກັບພວກຮູບຂອງພວກເຈົ້າ, ແລະ ດ້ວຍວິທີນີ້ ເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ ອົງພຣະຜູ້ເປັນເຈົ້າ."

24 [1]ພຣະຄຳຂອງພຣະຢາເວ ໄດ້ມາເຖິງຂ້ານ້ອຍ ໃນວັນທີສິບ, ໃນເດືອນທີສິບ, ແລະໃນປີທີເກົ້າ, ກ່າວວ່າ,[2]“ບຸດແຫ່ງມະນຸດເອີຍ, ຈົ່ງຂຽນຊື່
ຂອງວັນນີ້ໄວ້, ວັນນີ້, ເພາະກະສັດແຫ່ງບາບີໂລນໄດ້ອ້ອມນະຄອນເຢຣູຊາເລມໃນວັນນີ້.

[3]ດັ່ງນັ້ນ ຈົ່ງກ່າວຄຳສຸພາສິດຕໍ່ສູ້ເຊື້ອສາຍທີ່ກະບົດ, ຈົ່ງກ່າວຄຳອຸປະມາ. ກ່າວກັບພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ:
ຈົ່ງຕັ້ງຫມໍ້ໄວ້. ຕັ້ງໄວ້ ແລະ ຖອກນ້ຳໃສ່ຫມໍ້.[4]ຈົ່ງໃສ່ຕ່ອນຊີ້ນລົງໄປ, ເອົາຕ່ອນດີໆທັງຫມົດ — ຄືຕ່ອນກົກ-
ຂາ ແລ ະຊີ້ນສັນຂາຫນ້າ — ເລືອກກະດູກທີ່ດີທີ່ສຸດມາໃສ່ຫມໍ້ໃຫ້ເຕັມ.[5]ຈົ່ງເລືອກແກະທີ່ດີທີ່ສຸດຈາກຝູງ ແລະ ສຸມກະດູກໄວ້ກ້ອງມັນ. ຕົ້ມ
ມັນໃຫ້ດີ ແລະ ເພື່ອຂ້ຽວກະດູກທີ່ຢູ່ໃນຫມໍ້ນັ້ນດ້ວຍ.
[6]ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ວິບັດ ແກ່ເມືອງເລືອດ, ຄືຫມໍ້ຂີ້ຫມ້ຽງ ແລະ ຂີ້ຫມ້ຽງນັ້ນບໍ່ໄດ້ຫລຸດອອກມາ. ຈົ່ງ
ເອົາຊີ້ນອອກເທື່ອລະຕ່ອນ ຢ່າໂຍນມັນຫລາຍ.
[7]ເພາະວ່າເລືອດທີ່ນາງເຮັດໃຫ້ຕົກນັ້ນ ຍັງຢູ່ທ່າມກາງນາງ. ນາງໄດ້ຕັ້ງໄວ້ເທິງຫີນອ່ອນ; ນາງຍັງບໍ່ໄດ້ຖອກລົງດິນ ເພື່ອເອົາຂີ້ຝຸ່ນປົກໄວ້,[8]ສະນັ້ນ
ມັນເຮັດໃຫ້ເກີດຄວາມພິໂລດ ແລະ ການແກ້ແຄ້ນ. ເຮົາໄດ້ເຮັດໃຫ້ເລືອດຂອງນາງຕົກເທິງກ້ອນຫີນອ່ອນນັ້ນ ເພື່ອມັນຈະບໍ່ຖືກປົກບັງໄວ້ໄດ້.
[9]ເພາະສະນັ້ນ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ວິບັດ ແກ່ເມືອງທີ່ຊຸ່ມດ້ວຍເລືອດ. ເຮົາຈະເຮັດໃຫ້ກອງຟືນນັ້ນໃຫຍ່ຂຶ້ນ.[10]ຈົ່ງສຸມ
ຟືນເຂົ້າໄປ ແລະ ກໍໄຟຂຶ້ນ. ຈົ່ງຕົ້ມຊີ້ນໃຫ້ສຸກ ແລະ ເອົາເຄື່ອງປຸງໃສ່ ແລະ ປ່ອຍໃຫ້ກະດູກໄຫມ້.
[11]ແລ້ວຕັ້ງຫມໍ້ເປົ່າໄວ້ເທິງຖ່ານ, ເພື່ອໃຫ້ມັນຮ້ອນ ແລະ ໄຫມ້ທອງແດງ, ເພື່ອຄວາມເປິເປື້ອນນັ້ນຈະຖືກລະລາຍອອກ,
ຂີ້ຫມ້ຽງທີ່ຫນາກໍໄຫມ້ຫມົດ.'[12]ແຕ່ນາງກໍເສຍແຮງລ້າ ເພາະວ່ານ້ຳມັນທີ່ຫນາຂອງມັນ, ຂີ້ຫມ້ຽງຂອງມັນກໍບໍ່ຫລຸດອອກໄປ.
[13]ຄວາມປະພຶດອັນຫນ້າອັບອາຍຂອງເຈົ້າຢູ່ໃນບໍ່ສະອາດຂອງເຈົ້າ, ເພາະວ່າ ເຮົາໄດ້ຊຳລະເຈົ້າແລ້ວ, ແຕ່ເຈົ້າກໍຍັງບໍ່ອາດ
ຈະກາຍເປັນສະອາດໄດ້. ເຈົ້າກໍຍັງບໍ່ເປັນອິດສະຫລະຈາກການເປິເປື້ອນ ຈົນກວ່າ ເຮົາຈະຖອກເທຄວາມໂກດຮ້າຍຂອງເຮົາອອກເຫນືອເຈົ້າຈົນ
ຫມົດ.
[14]ເຮົາ, ແມ່ນພຣະຢາເວ, ໄດ້ປະກາດດັ່ງນີ້, ແລະ ເຮົາຈະເຮັດເຊັ່ນນັ້ນ. ເຮົາຈະບໍ່ຖອຍກັບ ຫລື ເຫັນໃຈ. ໃນວິຖີທາງຂອງເຈົ້າ, ແລະ
ການກະທຳຂອງພວກເຈົ້າ, ພວກເຂົາຈະພິພາກສາເຈົ້າ! — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.”
[15]ແລ້ວພຣະຄຳຂອງພຣະຢາເວກໍມາເຖິງຂ້ານ້ອຍ, ກ່າວວ່າ,[16]“ບຸດແຫ່ງມະນຸດເອີຍ, ເບິ່ງແມ໋! ເຮົາຈະເອົາສິ່ງທີ່ຕາຂອງ
ເຈົ້າເຫັນໄປຈາກເຈົ້າດ້ວຍໄພພິບັດ, ແຕ່ຢ່າໂສກເສົ້າເສຍໃຈ ຫລື ຮ້ອງໄຫ້, ແລະ ຢ່າໃຫ້ນ້ຳຕາໄຫລ.[17]ເຈົ້າຈົ່ງໂອ່ຍຄາງຢ່າງງຽບໆ. ຢ່າໄວ້ທຸກ
ໃຫ້ຄົນຕາຍ. ຈົ່ງຄຽນຜ້າໃສ່ຫົວຂອງເຈົ້າ ແລະ ໃສ່ເກີບຂອງເຈົ້າ, ແຕ່ຢ່າເອົາຜ້າປິດຫນ້າ ຫລື
ກິນອາຫານຂອງຜູ້ສູນເສຍເມຍທັງຫລາຍຂອງພວກເຂົາ.”
[18]ດັ່ງນັ້ນ ຂ້ານ້ອຍຈຶ່ງເວົ້າກັບປະຊາຊົນໃນຕອນເຊົ້າ, ແລະເມຍຂອງຂ້ານ້ອຍກໍສິ້ນຊີວິດໃນຕອນຄ່ຳ. ພໍຮຸ່ງເຊົ້າມາ ຂ້ານ້ອຍກໍໄດ້ເຮັດທຸກສິ່ງ
ເຫມືອນຢ່າງທີ່ຂ້ານ້ອຍໄດ້ຮັບຄຳສັ່ງມາ.
[19]ປະຊາຊົນກໍຖາມຂ້ານ້ອຍາວ່າ, “ທ່ານຈະບໍ່ບອກເຮົາທັງຫລາຍບໍ່ວ່າ ສິ່ງທີ່ທ່ານເຮັດນີ້ມີຄວາມຫມາຍຫຍັງ, ໃນສິ່ງທີ່ທ່ານກຳລັງເຮັດ?”[20]ດັ່ງນັ້ນ
ຂ້ານ້ອຍຈຶ່ງກ່າວແກ່ພວກເຂົາວ່າ, “ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວດັ່ງນີ້,[21]'ຈົ່ງກ່າວແກ່ເຊື້ອສາຍຂອງອິດສະຣາເອນວ່າ,
ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະເມີນເສີຍຕໍ່ສະຖານນະມັດສະການຂອງເຮົາ — ຊຶ່ງເປັນຄວາມພາກພູມ
ໃຈຂອງເຈົ້າ, ເປັນແກ້ວຕາດວງໃຈຂອງເຈົ້າ, ແລະ ເປັນຄວາມປາຖະຫນາຂອງຈິດວິນຍານເຈົ້າ, ແລະ ລູກຊາຍ ແລະ ລູກສາວທັງຫລາຍຂອງ
ເຈົ້າ ຜູ້ຊຶ່ງເຈົ້າໄດ້ປະຖິ້ມໄວ້ເບື້ອງຫລັງຈະລົ້ມລົງດ້ວຍຄົມດາບ.
[22]ແລ້ວເຈົ້າຈະເຮັດເຫມືອນຢ່າງທີ່ເຮົາໄດ້ເຮັດ: ເຈົ້າຈະບໍ່ເອົາຜ້າປິດຫນ້າຂອງເຈົ້າ, ຫລື ກິນອາຫານຂອງຊາຍຜູ້ໂສກເສົ້າ![23]ແຕ່ເຈົ້າຈະເອົາຜ້າ
ຄຽນຫົວ ແລະ ໃສ່ເກີບແທນ; ເຈົ້າຈະບໍ່ໂສກເສົ້າເສຍໃຈ ຫລືຮ້ອງໄຫ້, ເພາະເຈົ້າຈະລົ້ມລົງຍ້ອນຄວາມຊົ່ວຊ້າຂອງເຈົ້າ, ແລະ
ຜູ້ຊາຍແຕ່ລະຄົນຈະໂອ່ຍຄາງຕໍ່ຫນ້າອ້າຍນ້ອງຂອງຕົນ.[24]ດັ່ງນັ້ນ ເອເຊກຽນຈະເປັນເຄື່ອງຫມາຍສຳຄັນແກ່ເຈົ້າທັງຫລາຍ, ເຫມືອນ
ທຸກຢ່າງທີ່ລາວໄດ້ເຮັດ ເຈົ້າກໍຈະເຮັດເຫມືອນກັນ ເມື່ອເຫດການເຫລົ່ານີ້ມາເຖິງ. ແລ້ວເຈົ້າຈະໄດ້ຮູ້ວ່າ ເຮົາແມ່ນພຣະຢາເວ ອົງພຣະຜູ້ເປັນ-
ເຈົ້າ!'"
[25]ແຕ່ເຈົ້າ, ບຸດແຫ່ງມະນຸດເອີຍ, ໃນມື້ທີ່ເຮົາຍຶດວິຫານຂອງພວກເຂົາໄປ, ຊຶ່ງເປັນຄວາມຊື່ນຊົມຍິນດີຂອງພວກເຂົາ,
ຄວາມພາກພູມໃຈຂອງພວກເຂົາ, ແລະ ເປັນສິ່ງທີ່ຊື່ນໃຈ ແລະ ໃຈປາດຖະຫນາຂອງພວກເຂົາ — ແລະ ເມື່ອເຮົາໄດ້ເອົາລູກຊາຍ ແລະລູກ-
ສາວຂອງພວກເຂົາໄປ —[26]ໃນວັນນັ້ນ ຜູ້ອົບພະຍົບຈະມາຫາເຈົ້າ ເພື່ອຈະແຈ້ງຂ່າວໃຫ້ເຈົ້າໄດ້ຍິນ![27]ໃນວັນນັ້ນ ປາກຂອງເຈົ້າຈະຖືກເປີດຕໍ່ຫນ້າ
ຜູ້ອົບພະຍົບ ແລະ ເຈົ້າຈະເວົ້າວ່າ — ເຈົ້າຈະບໍ່ຫງຽບອີກຕໍ່ໄປ. ເຈົ້າຈະເປັນຫມາຍສຳຄັນສຳລັບພວກເຂົາ ແລະ ພວກເຂົາຈະຮູ້ວ່າ ເຮົາແມ່ນ
ພຣະຢາເວ.”


generated on Tue Jun 17 19:01:42 2025

25 [1]ແລ້ວພຣະຄຳຂອງພຣະຢາເວໄດ້ມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດແຫ່ງມະນຸດເອີຍ, ຈົ່ງຕັ້ງຫນ້າຂອງເຈົ້າໄປຕໍ່ສູ່ຄົນອຳໂມນ ແລະ ຈົ່ງ
ກ່າວຄຳທຳນວາຍຕໍ່ສູ້ພວກເຂົາ.

[3]ຈົ່ງກ່າວແກ່ຄົນອຳໂມນວ່າ, ' ຈົ່ງຟັງພຣະຄຳຂອງພຣະຢາເວອົງພຣະຜູ້ເປັນເຈົ້າ. ນີ້ເປັນສິ່ງທີ່ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວ: ເພາະເຈົ້າ
ກ່າວວ່າ, "ດີແລ້ວ! ຕໍ່ສະຖານນະມັດສະການຂອງເຮົາ ເມື່ອຍັງເປັນມົນທິນ, ແລະ ຕໍ່ສູ້ແຜ່ນດິນອິດສະຣາເອນ ເມື່ອມັນໄດ້ຖືກເຮັດໃຫ້ຮ້າງເປົ່າ,
ແລະ ຕໍ່ສູ້ເຊື້ອສາຍຂອງຢູດາເມື່ອພວກເຂົາຖືກກວາດໄປເປັນຊະເລີຍ,[4]ເພາະສະນັ້ນ, ເບິ່ງແມ໋, ເຮົາຈະມອບເຈົ້າໃຫ້
ເຈົ້າເປັນກຳມະສິດຂອງຊົນຊາດທາງທິດຕາເວັນອອກ. ພວກເຂົາຈະຕັ້ງຄ້າຍຕໍ່ສູ້ພວກເຈົ້າ ແລະ ຕັ້ງເຕັນຂອງພວກເຂົາຢູ່ທ່າມກາງພວກເຈົ້າ.
ພວກເຂົາຈະກິນຫມາກໄມ້ຂອງເຈົ້າ ແລະ ຈະດື່ມນ້ຳນົມຂອງເຈົ້າ.[5]ເຮົາຈະເຮັດໃຫ້ເມືອງຣັບບາເປັນທົ່ງຫຍ້າສຳລັບອູດ ແລະ ເຮັດໃຫ້ແຜ່ນດິນ
ຂອງຄົນອຳໂມນເປັນບ່ອນຢູ່ສຳລັບຝູງແກະ. ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.
[6]ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະເຈົ້າໄດ້ຕົບມື ແລະ ທຶບຕີນ, ແລະ ຄວາມປິຕິຍິນດີດ້ວຍໃຈຫມິ່ນປະຫມາດຕໍ່ສູ້
ແຜ່ນດິນອິດສະຣາເອນ.[7]ເພາະສະນັ້ນ, ເບິ່ງແມ໋! ເຮົາຈະປະຫັວງເຈົ້າດ້ວຍມືຂອງເຮົາ ແລະ ຈະມອບເຈົ້າໄວ້ແກ່ປະຊາຊົນທັງຫລາຍເຫມືອນ-
ເປັນຂອງປຸ້ນ. ເຮົາຈະຕັດເຈົ້າອອກຈາກຊົນຊາດທັງຫລາຍ ແລະ ເຮົາຈະເຮັດໃຫ້ເຈົ້າຈິບຫາຍໄປໃນທ່າມກາງປະເທດທັງຫລາຍ! ເຮົາຈະທຳ-
ລາຍເຈົ້າ, ແລະ ເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.'
[8]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເພາະໂມອາບ ແລະ ເສອີກ່າວວ່າ, "ເບິ່ງແມ໋! ເຊື້ອສາຍຢູດາກໍເຫມືອນກັບປະຊາຊາດອື່ນໆທັງ
ຫມົດ,"[9]ເພາະສະນັ້ນ, ເບິ່ງແມ໋! ເຮົາຈະເປີດຊາຍແດນຂອງໂມອາບອອກ, ເລີ່ມຈາກເມືອງຕ່າງໆ ຕາມຊາຍແດນ — ຄື
ບັນດາເມືອງຮຸ່ງເຮືອງແຫ່ງເມືອງເບັດເຢຊີໂມດ, ເມືອງບາອານເມໂອນ, ແລະ ເມືອງກີຣິອາດທາອິມ —[10]ປະຊາຊົນທາງທິດຕາເວັນອອກຈະຕໍ່ສູ້-
ກັບຄົນອຳໂມນ. ເຮົາຈະມອບອຳໂມນເປັນກຳມະສິດ ເພື່ອວ່າຈະບໍ່ມີໃຜນຶກເຖິງຄົນອຳໂມນອີກໃນທ່າມກາງບັນດາປະຊາຊາດ.
[11]ດັ່ງນັ້ນ ເຮົາຈະພິພາກສາລົງໂທດໂມອາບ, ແລະ ພວກເຂົາທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຢາເວ.'
[12]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເພາະວ່າເອໂດມໄດ້ແກ້ແຄ້ນຕໍ່ເຊື້ອສາຍຂອງຢູດາ ແລະ ມີຄວາມຊົ່ວໃຫ່ຍຫລວງໃນ
ການກະທຳເຊັ່ນນີ້.[13]ເພາະສະນັ້ນ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ເອໂດມ ແລະ ທຳລາຍທຸກຄົນ
ແລະ ສັດທຸກໂຕທີ່ຢູ່ທີ່ນັ້ນ. ເຮົາຈະເຮັດໃຫ້ພວກເຂົາຈິບຫາຍໄປ, ເຮັດໃຫ້ເປັນບ່ອນຮ້າງເປົ່າ, ຕັ້ງແຕ່ ເມືອງເຕມານ ຮອດເມືອງເດດານ. ພວກ-
ເຂົາກໍຈະລົ້ມລົງດ້ວຍດາບ.
[14]ເຮົາຈະວາງການແກ້ແຄ້ນຂອງເຮົາລົງເຫນືອເມືອງເອໂດມ ດ້ວຍມືຂອງອິດສະຣາເອນປະຊາຊົນຂອງເຮົາ, ແລະ ພວກເຂົາຈະເຮັດກັບເອໂດມ
ຕາມຄວາມຄຽດຮ້າຍ, ແລະ ຄວາມພິໂລດຂອງເຮົາ, ພວກເຂົາຈະຮູ້ເຖິງການແກ້ແຄ້ນຂອງເຮົາ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະ-
ຜູ້ເປັນເຈົ້າ.'
[15]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເພາະວ່າຄົນຟີລິດສະຕິນໄດ້ແກ້ແຄ້ນດ້ວຍໃຈປອງຮ້າຍ ແລະ
ຈາກພາຍໃນໂຕຂອງພວກເຂົາເອງ ພວກເຂົາຫມາຍຈະທຳລາຍຢູດາຫລາຍຕໍ່ຫລາຍຄັ້ງ.[16]ເພາະສະນັ້ນ, ນີ້ເປັນສິ່ງທີ່ພຣະຢາເວ ອົງພຣະຜູ້ເປັນ-
ເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ຄົນຟີລິດສະຕິນ, ແລະ ເຮົາຈະຕັດຄົນເກເຣັດອອກ ແລະ ທຳລາຍຄົນທີ່ເຫລືອຢູ່
ຕາມຝັ່ງທະເລນັ້ນເສຍ.[17]ແລ້ວເຮົາຈະເຮັດການແກ້ແຄ້ນຄັ້ງໃຫຍ່ຕໍ່ພວກເຂົາ ແລະ ລົງໂທດເຂົາ ດ້ວຍຄວາມໂກດຮ້າຍ, ແລ້ວພວກເຂົາຈະຮູ້ວ່າ
ເຮົາແມ່ນພຣະຢາເວ, ເມື່ອເຮົາເຮັດການແກ້ແຄ້ນເຫນືອພວກເຂົາ'"


generated on Tue Jun 17 19:01:42 2025

26 [1]ດັ່ງນັ້ນ ໃນວັນທີຫນຶ່ງຂອງເດືອນນັ້ນ, ປີທີສິບເອັດ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]"ບຸດແຫ່ງມະນຸດເອີຍ, ເພາະວ່າ
ເມືອງຕີເຣໄດ້ເວົ້າເຍາະເຍີ້ຍເຖິງເຢຣູຊາເລັມວ່າ, 'ດີແລ້ວ! ປະຕູເມືອງຂອງຊົນຊາດທັງຫລາຍຫັກເສຍແລ້ວ! ນາງໄດ້ຫັນມາຫາເຮົາ;
ເຮົາຈະເຮັດໃຫ້ບໍລິບູນຂຶ້ນ ເພາະນາງໄດ້ຖືກທຳລາຍ.'

[3]ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: 'ເບິ່ງແມ໋! ເຮົາຕໍ່ສູ້ເຈົ້າ!, ເມືອງຕີເຣເອີຍ, ແລະ ເຮົາຈະນຳປະຊາຊາດ
ທັງຫລາຍລຸກມາຕໍ່ສູ້ເຈົ້າ ເຫມືອນທະເລເຮັດໃຫ້ຄື້ນຫລາຍກະທົບຝັ່ງ.[4]ພວກເຂົາຈະທຳລາຍກຳແພງເມືອງຕີເຣ ແລະ ພັງທະລາຍຫໍຄອຍ
ທັງຫລາຍຂອງເມືອງນັ້ນເສຍ. ເຮົາຈະປັດຂີ້ຝຸ່ນດິນອອກຈາກນາງ ແລະ ເຮັດໃຫ້ນາງເປັນເຫມືອນກັບຍອດຂອງສີລາ.
[5]ນາງຈະເປັນບ່ອນສຳລັບຕາກແຫຢູ່ກາງທະເລ, ເນື່ອງຈາກເຮົາໄດ້ລັ່ນຄຳເວົ້າແລ້ວ — ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ — ແລະ
ນາງຈະກາຍເປັນສິ່ງໄດ້ປຸ້ນມາຂອງບັນດາປະຊາຊາດ.[6]ລູກສາວທັງຫລາຍຂອງນາງທີ່ຢູ່ທົ່ງນາ ຈະຖືກຂ້າເສຍດ້ວຍຄົມດາບ, ແລະ ພວກເຂົາຈະ
ຮູ້ວ່າ ເຮົາແມ່ນພຣະຢາເວ.'
[7]ເບິ່ງແມ໋, ຈາກພາກເຫນືອ ເຮົາໄດ້ນຳ ເນບູກາດເນັດຊາ ກະສັດຂອງບາບີໂລນ, ກະສັດເຫນືອກະສັດທັງປວງ, ຕໍ່ສູ້ເມືອງຕີເຣ,
ດ້ວຍມ້າທັງຫລາຍ ແລະ ລົດຮົບມ້າ, ແລະ ກັບບັນດາທະຫານມ້າ ແລະ ກັບກຳລັງຄົນຢ່າງຫລວງຫລາຍ.[8]ເຂົາຈະຂ້າລູກສາວຂອງ
ເຈົ້າໃນທົ່ງນາ. ເຂົາຕັ້ງເຄື່ອງລ້ອມເມືອງຕໍ່ສູ້ກັບເຈົ້າ ແລະ ສ້າງຫໍຄອຍຕໍ່ສູ້ກຳແພງທັງຫລາຍຂອງເຈົ້າ ແລະ ຍົກໂລ່ຂຶ້ນເພື່ອຕໍ່ສູ້ກັບເຈົ້າ.
[9]ເຂົາຈະຕັ້ງເຄື່ອງທະລຸທັງຫລາຍຂອງເຈົ້າດ້ວຍໄມ້ທ່ອນຕໍ່ສູ້ກຳແພງຂອງເຈົ້າ, ແລະ ບັນດາອາວຸດຂອງເຂົາທຳລາຍຫໍຄອຍທັງຫລາຍຂອງເຈົ້າ
ລົງ.[10]ບັນດາມ້າຂອງເຂົາມີຢ່າງຫລວງຫລາຍຈົນເຮັດໃຫ້ຂີ້ຝຸ່ນປົກຄຸມເຈົ້າໄວ້. ກຳແພງເມືອງຂອງເຈົ້າຈະສັ່ນສະເທືອນດ້ວຍສຽງຂອງບັນດາທະ-
ຫານມ້າ, ບັນດາກວຽນ, ແລະ ບັນດາລົດຮົບມ້າ. ເມື່ອເຂົາເຂົ້າປະຕູເມືອງຂອງເຈົ້າ, ເຂົາຈະເຂົ້າມາເຫມືອນກັບຄົນຢ່າງເຂົ້າ
ເມືອງທີ່ກຳແພງໄດ້ທຳລາຍລົງແລ້ວ.[11]ຕີນມ້າຈະຢຽບບັນດາຖະຫນົນທຸກສາຍຂອງເຈົ້າ ດ້ວຍກີບມ້າທັງຫລາຍ. ເຂົາຈະຂ້າຊົນຊາດຂອງເຈົ້າ
ດ້ວຍຄົມດາບ ແລະ ເສົາຫີນອັນແຂງແຮງທັງຫລາຍຂອງເຈົ້າຈະລົ້ມລົງເຖິງດິນ.
[12]ພວກເຂົາຈະປຸ້ນເອົາຊັບສົມບັດຂອງເຈົ້າ ແລະ ເຂົາຈະເອົາສິນຄ້າຕ່າງໆຂອງເຈົ້າໄປ. ພວກເຂົາຈະພັງກຳແພງທັງຫລາຍຂອງເຈົ້າລົງ ແລະ ຈະ
ທຳລາຍເຮືອນອັນຫລູຫລາຕ່າງໆຂອງເຈົ້າເສຍ. ບັນດາຫີນ, ບັນດາໄມ້ ແລະ ຊາກຫັກພັງດິນຂອງເຈົ້ານັ້ນ ພວກເຂົາຈະໂຍນຖິ້ມລົງ
ນ້ຳທັງຫລາຍ.[13]ເຮົາຈະຢຸດສຽງເພງຕ່າງໆຂອງເຈົ້າເສຍ. ສຽງພິນຄູ່ທັງຫລາຍຂອງເຈົ້າກໍຈະບໍ່ເປັນທີ່ໄດ້ຍິນອີກຕໍ່ໄປ.[14]ເຮົາຈະເຮັດໃຫ້ເຈົ້າ
ເປັນຫີນຫົວໂລ້ນ, ເຈົ້າຈະກາຍເປັນສະຖານທີ່ສຳລັບຕາກແຫມອງ. ເຈົ້າຈະບໍ່ຖືກສ້າງຂຶ້ນໃຫມ່ອີກເລີຍ, ເພາະເຮົາເອງ, ຄືພຣະຢາເວ
ອົງພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າແລ້ວ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
[15]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວແກ່ເມືອງຕີເຣວ່າ, 'ເກາະທັງຫລາຍຈະບໍ່ສັ່ນສະເທືອນ ດ້ວຍສຽງລົ້ມລົງຂອງເຈົ້າ, ແລະ
ສຽງໂອ່ຍຄາງຂອງຜູ້ບາດເຈັບ ເມື່ອການຂ້າຟັນໂຫດຮ້າຍເກີດຂຶ້ນທ່າມກາງເຈົ້າບໍ່?[16]1ແລ້ວເຈົ້າຊາຍແຫ່ງທະເລທັງຫລາຍ ຈະກ້າວລົງມາຈາກ
ບັນລັງຂອງພວກເຂົາ ແລະ ຖອດເສື້ອຄຸມ ແລະ ປົດເຄື່ອງແຕ່ງກາຍທີ່ປັກແສ່ວອອກເສຍ. ພວກເຂົາຈະເອົາເອົາຄວາມຢ້ານກົວມາເປັນເຄື່ອງນຸ່ງ,
ພວກເຂົາຈະນັ່ງຢູ່ເທິງພື້ນດິນ ແລະ ສັ່ນຢູ່ທຸກເວລາ ແລະ ພວກເຂົາຢ້ານກົວເພາະເຈົ້າ.
[17]ພວກເຂົາເຫລົ່ານີ້ ຈະກ່າວບົດຄໍ່າຄວນເລື່ອງເຈົ້າ, ແລະກ່າວແກ່ເຈົ້າວ່າ, 'ໂອ ນະຄອນທີ່ມີຊື່ສຽງທີ່ພວກຊາວທະເລທັງຫລາຍອາໄສຢູ່,
ໄດ້ຖືກທຳລາຍພິນາດແລ້ວ. ເມືອງທີ່ມີຊື່ສຽງວ່າເຂັ້ມແຂງ — ບັດນີ້ໄດ້ຫາຍໄປຈາກທະເລແລ້ວ. ຜູ້ອາໄສຢູ່ເມືອງນີ້
ຄັ້ງຫນຶ່ງເລື່ອງອຳນາດຢູ່ທະເລໄດ້ສ້າງຄວາມຢ້ານກົວ ແກ່ຄົນທີ່ອາໄສໃກ້ພວກເຂົາ.[18]ບັດນີ້ ຊາຍຝັ່ງທະເລທັງຫລາຍກໍຈະສັ່ນສະເທືອນໃນວັນທີ່
ເຈົ້າລົ້ມລົງ. ບັນດາເກາະທີ່ຢູ່ໃນທະເລ ກໍຈະຢ້ານກົວຍ້ອນການທີ່ເຈົ້າໄດ້ສູນສິ້ນໄປແລ້ວ.'
[19]ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເມື່ອເຮົາເຮັດໃຫ້ເຈົ້າເປັນເມືອງຮ້າງ, ເຫມືອນຢ່າງບັນດາເມືອງອື່ນໆທີ່ບໍ່ມີຄົນອາໄສຢູ່,
ເມື່ອເຮົາຈະນຳທະເລມາຕໍ່ສູ້ເຈົ້າ, ແລະ ເມື່ອແມ່ນ້ຳໃຫຍ່ທັງຫລາຍມາຖ້ວມເຈົ້າໄວ້.[20]ແລ້ວເຮົາຈະນຳເຈົ້າລົງໄປຍັງເວລາແຫ່ງ
ບັນພະບູລຸດຂອງເຈົ້າ, ເຫມືອນກັບຄົນອື່ນທີ່ໄດ້ລົງໄປໃນຫລູມຝັງສົບ; ເຮົາຈະເຮັດໃຫ້ເຈົ້າອາໄສຢູ່ໃນດິນແດນທີ່ຕ່ຳທີ່ສຸດຂອງແຜ່ນດິນໂລກ
ເຫມືອນຊາກເພພັງໃນສະໄຫມເດີມນັ້ນ. ດ້ວຍເຫດນີ້ ເຈົ້າຈະບໍ່ໄດ້ກັບມາ ແລະ ຈະບໍ່ໄດ້ຢືນຢູ່ໃນແຜ່ນດິນຂອງຜູ້ມີຊີວິດອີກຕໍ່ໄປ.
[21]ເຮົາຈະນຳໄພພິບັດມາເທິງເຈົ້າ, ແລະ ເຈົ້າຈະບໍ່ມີເຈົ້າອີກຕໍ່ໄປ. ເຖິງແມ່ນໃຜຈະມາຊອກຫາເຈົ້າ, ແຕ່ຈະບໍ່ມີໃຜຫາພວກເຈົ້າພົບອີກຈັກເທື່ອ —
ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ."

 generated on Tue Jun 17 19:01:42 2025

27 1ອີກຄັ້ງຫນຶ່ງທີ່ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2"ບັດນີ້, ບຸດແຫ່ງມະນຸດເອີຍ, ຈົ່ງເປັ່ງສຽງບົດເພງຄໍາຄວນຄ້ວຍເລື່ອງ
ເມືອງຕີເຣ, 3ແລະ ຈົ່ງກ່າວແກ່ເມືອງຕີເຣ, ຜູ້ຊຶ່ງອາໄສຢູ່ປະຕູແຄມທະເລ, ເປັນພໍ່ຄ້າທັງຫລາຍຕາມເກາະຕ່າງໆ, ພຣະຢາເວ ອົງພຣະຜູ້-
ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເມືອງຕີເຣເອີຍ, ເຈົ້າໄດ້ກ່າວວ່າ, 'ຂ້ອຍມີຄວາມງົດງາມສົມບູນແບບ.'

4ເຂດແດນຂອງເຈົ້າຢູ່ທີ່ໃຈກາງທະເລທັງຫລາຍ; ຜູ້ກໍ່ສ້າງໄດ້ເຮັດໃຫ້ຄວາມງົດງາມຂອງເຈົ້າສົມບູນແບບ. 5ພວກເຂົາໄດ້ເຮັດກະດານເຮືອ
ທັງຫມົດຂອງເຈົ້າດ້ວຍໄມ້ສົນຈາກພູເຮີໂມນ; ພວກເຂົາເອົາໄມ້ແປກມາຈາກເລບານອນເຮັດເປັນເສົາໃຫ້ເຈົ້າ.
6ພວກເຂົາ ໄດ້ເຮັດໄມ້ພາຍຂອງເຈົ້າຈາກໄມ້ໂອກແຫ່ງບາຊານ; ພວກເຂົາໄດ້ເຮັດດາດຟ້າເຮືອດ້ວຍໄມ້ສົນຈາກຊາຍຝັ່ງທະເລໄຊປຣັສ, ແລະ
ພວກເຂົາໄດ້ຫຸ້ມໄວ້ດ້ວຍງາຊ້າງ. 7ສ່ວນໃບເຮືອຂອງເຈົ້ານັ້ນ ເຮັດດ້ວຍຜ້າປ່ານປັກແຊ່ວເນື້ອລະອຽດຈາກເອຢິບ
ຊຶ່ງເຫມືອນກັບເປັນທຸງທັງຫລາຍຂອງເຈົ້າ.
8ຄົນເຂົາເຫລົ່ານັ້ນ ຜູ້ຊຶ່ງອາໄສຢູ່ເມືອງຊີໂດນ ແລະ ເມືອງອາວາດ ເປັນຄົນພາຍເຮືອຂອງເຈົ້າ; ໂອ ຕີເຣ, ຊ່າງມີຝີມືຂອງເຈົ້າທີ່ຢູ່ກັບເຈົ້າ;
ພວກເຂົາເປັນນາຍທ້າຍເຮືອຂອງເຈົ້າ. 9ຜູ້ເປັນນາຍຊ່າງຜູ້ຊໍານານຈາກເມືອງເກບານ ເປັນຊ່າງແປງຮອຍຮົ່ວເຮືອໃຫ້ເຈົ້າ; ບັນດາເຮືອທະເລທັງ
ຫມົດລວມທັງພວກລູກເຮືອຂອງພວກເຂົາກໍຢູ່ໃນທ່າມກາງເຈົ້າ ເພື່ອຂາຍແລກປ່ຽນສິນຄ້າກັບເຈົ້າ.
10ຊາວເປີເຊຍ, ຊາວລີເດຍ, ແລະ ຊາວລີເບຍ ກໍຢູ່ໃນກອງທັບຂອງເຈົ້າ, ຄືນັກຮົບຂອງເຈົ້າ. ພວກເຂົາໄດ້ແຂວນໂລ່ ແລະຫມວກເຫລັກຢູ່ກັບ
ເຈົ້າ; ພວກເຂົາເຮັດໃຫ້ເຈົ້າມີກຽດ. 11ຜູ້ຊາຍຊາວອັກວັດ ແລະ ຊາວເຮເລດ ໃນກອງທັບຂອງເຈົ້າໄດ້ຢູ່ອ້ອມກໍາແພງຂອງເຈົ້າ, ແລະ ພວກ-
ຄົນຊາວກາມາດ ໄດ້ຢູ່ຫໍຄອຍຂອງເຈົ້າ. ພວກເຂົາໄດ້ແຂວນໂລ່ໄວ້ຕາມກໍາແພງທັງຫລາຍອ້ອມຮອບເຈົ້າ! ພວກເຂົາ
ເຮັດໃຫ້ເຈົ້າງົດງາມພຽບພ້ອມ.
12ຊາວທາຊິດໄດ້ເປັນຜູ້ຄ້າຂາຍກັບເຈົ້າ ເພາະເຈົ້າມີຄວາມມັ່ງຄັ່ງຈາກສິນຄ້າຫລວງຫລາຍທີ່ຈະຂາຍຄື: ເງິນ, ເຫລັກ, ກົ່ວ ແລະ ຊືນ.
ພວກເຂົາໄດ້ມາຊື້ ແລະ ສິນຄ້າທັງຫລາຍຂອງເຈົ້າ! 13ເມືອງຢາວານ, ຕູບານ, ແລະ ເມເຊັກ — ພວກເຂົາໄດ້ຂາຍຂ້າທາດ ແລະ ພາຊະນະ
ທັງຫລາຍທີ່ເຮັດຈາກທອງເຫລືອງ. ພວກເຂົາໄດ້ມາເບິ່ງແຍງການຄ້າຂາຍສິນຄ້າຂອງເຈົ້າ.
14ເຊື້ອສາຍເບັດໂຕກາມາເອົາພວກມ້າ, ພວກມ້າເສິກ ແລະພວກລໍມາແລກກັບສິນຄ້າຂອງເຈົ້າ. 15ຊາວໂຣເດັດເປັນຄູ່ການຄ້າຂອງເຈົ້າ
ເທິງແຜ່ນດິນຊາຍທະເລຈໍານວນຫລາຍ. ສິນຄ້າຢູ່ໃນອໍານາດຂອງເຈົ້າ; ພວກເຂົາໄດ້ນໍາເອົາເຂົາສັດ, ງາຊ້າງ ແລະ ໄມ້ຫມາກເດືອມາເປັນຄ່າ
ຂອງສິນຄ້າ!
16ຊາວຊີເຣຍ ເປັນຜູ້ການຄ້າກັບເຈົ້າ ເພາະເຈົ້າມີສິນຄ້າຫລວງຫລາຍ; ພວກເຂົາເອົາມໍຣະກົດ, ຜ້າສີມ່ວງ, ຜ້າສີສັນຕ່າງໆ, ຜ້າປ່ານເນື້ອລະ-
ອຽດ, ໄຂ່ມຸກຕ່າງໆ ແລະ ທັບທິມ ມາແລກກັບສິນຄ້າຂອງເຈົ້າ. 17ຢູດາ ແລະ ແຜ່ນດິນອິດສະຣາເອນ ກໍໄດ້ຄ້າຂາຍກັບເຈົ້າ. ພວກເຂົາເອົາເຂົ້າ-
ເປືອກຈາກເມືອງມິນນິດ, ຂະຫນົມເຄັກ, ນ້ໍາເຜິ້ງ, ນ້ໍາມັນ ແລະ ພິມເສນ ມາແລກເປັນສິນຄ້າກັບເຈົ້າ. 18ດາມັສກັດໄປມາຄ້າຂາຍກັບເຈົ້າ ເພາະ
ເຈົ້າມີສິນຄ້າຫລວງຫລາຍ, ຊັບສິນຫລວງຫລາຍພາຍມາກຂອງເຈົ້າ, ແລະ ເຫລົ້າອະງຸ່ນແຫ່ງເຮນໂບນ ແລະ ຂົນແກະຂາວແຫ່ງສາຮາ.
19ດານ ແລະ ຢາວານ ຈາກອູຊານໄດ້ມາແລກສິນຄ້າຂອງເຈົ້າ ຄືເຫລັກຫລໍ່, ເຄື່ອງເທດຕ່າງໆ, ອົບເຊີຍ ແລະ ສີໄຄ.
ສິ່ງເຫລົ່ານີ້ໄດ້ກາຍເປັນສິນຄ້າສໍາລັບເຈົ້າ. 20ເມືອງເດດານເປັນຜູ້ຄ້າຂາຍກັບເຈົ້າ ໃນເລື່ອງເບາະອານມ້າສໍາລັບບັນດານັກຂີ່ມ້າຢ່າງດີ. 21ເມືອງອາ-
ຣາເບຍ ແລະ ເຈົ້ານາຍທັງຫລາຍຂອງເມືອງເກດາ ກໍເປັນຜູ້ຄ້າຂາຍກັບເຈົ້າ; ພວກເຂົາໄດ້ຂາຍພວກລູກແກະ, ພວກແກະຜູ້, ແລະ ພວກແບ້.
22ພໍ່ຄ້າທັງຫລາຍຂອງເມືອງເຊບາ ແລະ ເມືອງຣາອາມາກໍຄ້າຂາຍກັບເຈົ້າ. ພວກເຂົາເອົາເຄື່ອງຫອມຊະນິດຢ່າງດີໆທັງຫມົດ ແລະ ເພັດພອຍ
ທຸກຊະນິດ; ພວກເຂົາເອົາຄໍາມາແລກເປັນສິນຄ້າກັບເຈົ້າ. 23ເມືອງຮາຣານ, ການເນ, ແລະ ເອເດນ ເປັນຜູ້ຄ້າຂາຍກັບເຈົ້າ, ລວມທັງເມືອງເຊບາ,
ອັດຊູຣະ ແລະ ກິນມາດດ້ວຍ.
24ນີ້ຄືສິ່ງທັງຫລາຍຂອງຜູ້ຄ້າຂອງເຈົ້າໃນຕະຫລາດທັງຫລາຍຂອງເຈົ້າ ຄື ຜ້າຄຸມໄຫລ່ສີມ່ວງ ຜະສົມຜ້າຕໍາສີຕ່າງໆ, ແລະ ຜ້າຫົ່ມຫລາຍສີ,
ຜ້າປັກແສ່ວ, ຜ້າຕໍາ-ຢ່າງດີ. 25ກໍາປັ່ນທັງຫລາຍໄດ້ບັນທຸກສິນຄ້າທຸກຊະນິດຂອງເຈົ້າ! ດັ່ງນັ້ນ ເຈົ້າຈຶ່ງໄດ້ບັນທຸກສິນຄ້າຈົນເຕັມ, ບັນທຸກຢ່າງຫນັກ
ໃນການຂົນສົ່ງທາງທະເລ!
26ພວກລູກເຮືອທັງຫລາຍຂອງເຈົ້າ ໄດ້ນໍາເຈົ້າອອກໄປຍັງທະເລອັນກວ້າງໃຫຍ່; ລົມຕະເວັນອອກໄດ້ເຮັດໃຫ້ເຮືອແຕກຢູ່ກາງທະເລ.
27ຊັບສິນຂອງເຈົ້າ, ແລະ ສິນຄ້າຂອງເຈົ້າ; ພວກລູກເຮືອຂອງເຈົ້າ ແລະ ຊ່າງເຮືອຂອງເຈົ້າ, ຜູ້ສ້າງເຮືອ; ຜູ້ຄ້າຂາຍສິນຄ້າກັບເຈົ້າ, ແລະ ນັກຮົບ
ທັງຫມົດຜູ້ຢູ່ໃນເຈົ້າ, ພ້ອມດ້ວຍລູກເຮືອທັງຫມົດຂອງເຈົ້າ — ພວກເຂົາຈະຈົມລົງໃນບ່ອນເລິກຂອງໃຈກາງທະເລໃນວັນທີ່ເຈົ້າຈິບຫາຍໄປ.
28ບັນດາເມືອງແຫ່ງທະເລຈະສັ່ນສະເທືອນດ້ວຍສຽງຮ້ອງວຸ້ນວາຍຂອງນາຍທ້າຍເຮືອຂອງເຈົ້າ; 29ບັນດາຜູ້ທີ່ຖືໄມ້ພາຍທັງຫມົດ
ຈະລົງມາຈາກເຮືອຂອງພວກເຂົາ; ພວກລູກເຮືອ ແລະ ນາຍທ້າຍເຮືອ ກໍມາຢືນຢູ່ເທິງແຜ່ນດິນທັງຫມົດ. 30ແລ້ວພວກເຂົາຈະທໍາໃຫ້ເຈົ້າຟັງສຽງ
ຮ້ອງຂອງພວກເຂົາ ແລະ ຈະຮ້ອງໄຫ້ດ້ວຍຄວາມຂົມຂື່ນ; ພວກເຂົາຈະເອົາຝຸ່ນດິນໃສ່ຫົວຂອງພວກເຂົາ. ແລະ ພວກເຂົາຈະກິ້ງເກືອກຢູ່ທີ່ກອງ
ຂີ້ເທົ່າ.
31ພວກເຂົາຈະແຖຜົມຂອງພວກເຂົາ ເພື່ອເຈົ້າ ແລະ ຜູກມັດພວກເຂົາໄວ້ດ້ວຍຜ້າກະສອບ, ແລະ ພວກເຂົາຈະຮ້ອງໄຫ້ ຢ່າງຂົມຂື່ນເຫນືອເຈົ້າ!
ແລະ ພວກເຂົາຈະຮ້ອງໄຫ້. 32ພວກເຂົາຈະຍົກສຽງຮ້ອງໄຫ້ຄໍາຄວນເພື່ອເຈົ້າ ແລະ ກ່າວສຽງຄໍາຄວນເຫນືອເຈົ້າ, ຜູ້ຊຶ່ງເຫມືອນເມືອງຕີເຣ,
ຜູ້ຊຶ່ງບັດນີ້ນໍາສູ່ຄວາມງຽບເຫງົາຢູ່ທ່າມກາງທະເລ? 33ເມື່ອສິນຄ້າຂອງພວກເຈົ້າອອກຈາກຝັ່ງທະເລ, ກໍເຮັດໃຫ້ຊົນຊາດທັງຫລາຍພໍໃຈ; ເຈົ້າໄດ້
ເຮັດໃຫ້ບັນດາກະສັດແຫ່ງໂລກຮັ່ງມີ ດ້ວຍສົມບັດ ແລະ ສິນຄ້າຫລວງຫລາຍຂອງເຈົ້າ.
34ແຕ່ເມື່ອເຈົ້າແຕກໄປໃນທະເລ, ໃນບ່ອນນ້ໍາເລິກນັ້ນ, ສິນຄ້າທັງຫລາຍຂອງເຈົ້າ ແລະ ລູກເຮືອທັງຫລາຍຂອງເຈົ້າໄດ້ຈົມລົງ!
35ຜູ້ອາໄສຢູ່ແຄມທະເລທັງຫມົດຕ່າງກໍຕົກໃຈ ເພາະເຈົ້າ, ແລະ ບັນດາກະສັດທັງຫລາຍຂອງເມືອງເຫລົ່ານັ້ນຢູ່ໃນຄວາມຢ້ານກົວ! ສີຫນ້າ
ຂອງພວກເຂົາລ້ວນແຕ່ຈືດຈາງ. 36ບັນດາພໍ່ຄ້າທ່າມກາງຊົນຊາດທັງຫລາຍຈະເຍາະເຍີ້ຍເຈົ້າ; ເຈົ້າໄດ້ກາຍເປັນຄວາມຢ້ານກົວ, ແລະ ເຈົ້າຈະບໍ່
ດໍາລົງຢູ່ຕໍ່ໄປອີກຈັກເທື່ອ."

 generated on Tue Jun 17 19:01:42 2025

28 [1]ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]“ບຸດແຫ່ງມະນຸດເອີຍ, ຈົ່ງກ່າວແກ່ເຈົ້າເມືອງຕີເຣວ່າ, 'ພຣະຢາເວ ອົງພຣະຜູ້-
ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະຈິດໃຈຂອງເຈົ້າອວດອົ່ງຈອງຫອງຂຶ້ນ! ເຈົ້າໄດ້ເວົ້າວ່າ, “ເຮົາເປັນເທບພະເຈົ້າ! ເຮົາຈະນັ່ງຢູ່ໃນບ່ອນ
ນັ່ງຂອງບັນດາເທບພະເຈົ້າທັງຫລາຍຢູ່ໃຈກາງທະເລທັງປວງ!" ແຕ່ວ່າເຈົ້າເປັນພຽງແຕ່ມະນຸດ ແລະ ບໍ່ແມ່ນເທບພະເຈົ້າ, ແຕ່ເຈົ້າ
ເຮັດໃຫ້ໃຈຂອງເຈົ້າຄືຫົວໃຈຂອງເທບພະເຈົ້າທັງຫລາຍ;[3]ເຈົ້າຄິດວ່າ ເຈົ້າສະຫລາດກວ່າດານີເອນ, ແລະ ບໍ່ມີຄວາມລັບອັນໃດທີ່ເຊື່ອງໃຫ້ພົ້ນ
ຈາກເຈົ້າໄດ້!

[4]ເຈົ້າໄດ້ເຮັດໃຫ້ຕົນເອງຮັ່ງມີດ້ວຍສະຕິປັນຍາ ແລະ ຄວາມຊຳນານ, ແລະ ໄດ້ຮວບຮວມຄຳ ແລະ ເງິນມາໄວ້ໃນຄັງສົມບັດຂອງເຈົ້າ![5]ດ້ວຍສະ-
ຕິປັນຍາຍິ່ງໃຫຍ່ໃນການຄ້າຂາຍຂອງເຈົ້າ, ເຈົ້າໄດ້ຊັບສົມບັດຂອງເຈົ້າເພີ່ມທະວີຂຶ້ນ, ແລະ ຈິດໃຈຂອງເຈົ້າກໍອວດອົ່ງຈອງຫອງຂຶ້ນໃນຊັບສົມ-
ບັດຂອງເຈົ້າ.
[6]ເພາະສະນັ້ນ, ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະເຈົ້າເຮັດໃຫ້ຄວາມຄິດເຈົ້າ ເປັນເຫມືອນຂອງເທບພະເຈົ້າ,[7]ສະນັ້ນ, ເຮົາ
ຈະນຳຄົນຕ່າງດ້າວທັງຫລາຍມາຕໍ່ສູ້ເຈົ້າ, ເຮັດໃຫ້ຫນ້າຢ້ານກົວທີ່ສຸດໃນບັນດາຜູ້ຊາຍຈາກບັນດາປະຊາຊາດທັງຫລາຍ. ພວກເຂົາຈະຖອດ
ດາບອອກຕໍ່ສູ້ກັບຄວາມງາມແຫ່ງສະຕິປັນຍາຂອງເຈົ້າ, ແລະ ພວກເຂົາຈະຫລົບລູ່ຄວາມຮຸ່ງເຮືອງຂອງເຈົ້າ.
[8]ພວກເຂົາຈະສົ່ງເຈົ້າລົງໄປໃນຂຸມຝັງສົບຄົນຕາຍ, ແລະ ເຈົ້າຈະຕາຍເປັນສົບເຫມືອນກັບຄົນທີ່ຕາຍໃນໃຈກາງທະເລທັງຫລາຍ.[9]ເຈົ້າຈະກ່າວອີກ
ບໍວ່າ, "ຂ້ອຍເປັນເທບພະເຈົ້າ" ຕໍ່ຫນ້າຄົນທີ່ຂ້າເຈົ້າບໍ? ເຈົ້າເປັນພຽງແຕ່ມະນຸດ ບໍ່ແມ່ນເທບພະເຈົ້າ, ແລະ ເຈົ້າຈະຢູ່ໃນມືຂອງຄົນທີ່ແທງເຈົ້າ.
[10]ເຈົ້າຈະຕາຍເຫມືອນຄົນທີ່ບໍ່ໄດ້ເຂົ້າພິທີຕັດ ດ້ວຍມືຂອງຄົນຕ່າງດ້າວ, ເພາະເຮົາໄດ້ລັ່ນວາຈາແລ້ວ — ນີ້ເປັນຄຳປະກາດຂອງພຣະຢາເວອົງ-
ພຣະຜູ້ເປັນເຈົ້າ.'"
[11]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[12]“ບຸດແຫ່ງມະນຸດເອີຍ, ຈົ່ງເປັ່ງສຽງຮ້ອງຄຳຄວນເຖິງກະສັດແຫ່ງຕີເຣ ແລະ ຈົ່ງກ່າວ
ແກ່ເຂົາວ່າ 'ພຣະຢາເວອົງ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຈົ້າເປັນແບບຢ່າງຂອງຄວາມສົມບູນແບບ, ເຕັມໄປດ້ວຍສະຕິປັນຍາ ແລະ ມີ
ຄວາມງາມພຽບພ້ອມ.[13]ເຈົ້າເຄີຍຢູ່ໃນເອເດນ, ສວນຂອງພຣະເຈົ້າ, ເພັດພອຍທຸກຢ່າງປົກຄຸມເຈົ້າໄວ້: ຄືທັບທິມ, ພອຍເຫລືອງ, ມໍລະກົດ,
ເພທາຍ, ຫີນອ່ອນ, ພອຍຂຽວ, ພອຍສີຄາມ, ແລະ ຢົກ. ເພັດພອຍເຫລົ່ານີ້ປະກອບ ແລະ ຝັງໃນຕົວເຮືອນທີ່ເຮັດມາຈາກຄຳ.
ຊຶ່ງຈັດຕຽມໄວ້ແລ້ວໃນວັນທີ່ສ້າງເຈົ້າຂຶ້ນມາ.
[14]ເຮົາໄດ້ແຕ່ງຕັ້ງເຈົ້າໄວ້ໂດຍມີເຄຣຸບເປັນຜູ້ພິທັກມະນຸດຊາດຢູ່ເທິງພູເຂົາບໍຣິສຸດຂອງພຣະເຈົ້າ. ເຈົ້າໄດ້ເຄີຍເດີນຢູ່ທ່າມກາງສີລາໄຟ.[15]ເຈົ້າກໍປາ-
ສະຈາກຕຳຫນິໃນວິທີທາງຂອງເຈົ້າ, ຕັ້ງແຕ່ມື້ທີ່ເຈົ້າໄດ້ຖືກສ້າງຂຶ້ນຈົນກວ່າພົບຄວາມຊົ່ວຊ້າໄດ້ພົບໃນໂຕເຈົ້າ.
[16]ໂດຍການຄ້າຫລວງຫລາຍຂອງເຈົ້າ ເຕັມໄປດ້ວຍການທາລຸນ, ແລະ ເຈົ້າໄດ້ເຮັດບາບ. ດັ່ງນັ້ນ ເຮົາໄດ້ຂັບໄລ່ເຈົ້າໄປອອກຈາກຈາກພູເຂົາແຫ່ງ
ພຣະເຈົ້າ, ເຫມືອນຢ່າງຜູ້ທີ່ລະເລີຍ, ແລະເຮົາໄດ້ທຳລາຍເຈົ້າ, ເຄຣຸບຜູ້ພິທັກນັ້ນ, ກໍຂັບໄລ່ເຈົ້າອອກໄປຈາກທ່າມກາງສີລາໄຟ.[17]ຈິດໃຈຂອງເຈົ້າ
ອວດອ້າງຈອງຫອງຂຶ້ນເພາະຄວາມງາມຂອງເຈົ້າ; ເຈົ້າໄດ້ເຮັດໃຫ້ສະຕິປັນຍາຂອງເຈົ້າເສື່ອມໂຊມລົງ ເພາະດ້ວຍຄວາມງາມຂອງເຈົ້າ, ເຮົາຈະ
ໂຍນເຈົ້າລົງດິນ. ເຮົາຈະວາງເຈົ້າຕໍ່ຫນ້າກະສັດທັງຫລາຍ ເພື່ອວ່າເຂົາເຫລົ່ານັ້ນຈະເຫັນເຈົ້າ.
[18]ເຫດເພາະຄວາມຜິດບາບຫລວງຫລາຍຂອງເຈົ້າ ແລະ ການຄ້າທີ່ບໍ່ສັດຊື່ຂອງເຈົ້າ, ເຈົ້າເຮັດໃຫ້ສະຖານນະມັດສະການບໍຣິສຸດເປັນມົນທິນ.
ດັ່ງນັ້ນ ເຮົາຈຶ່ງເຮັດໄຟອອກມາຈາກເຈົ້າ; ໄຟກໍເຜົາຜານເຈົ້າ. ເຮົາຈະເຮັດໃຫ້ເຈົ້າກາຍເປັນຂີ້ເຖົ່າໄປຕາມພື້ນໂລກຕໍ່ສາຍຕາຂອງທຸກຄົນທີ່ເບິ່ງ
ເຈົ້າ.[19]ບັນດາຜູ້ທີ່ຮູ້ຈັກເຈົ້າທ່າມກາງຊົນຊາດທັງຫລາຍ ພວກເຂົາຈະຕົກຕະລຶງ ເພາະເຫັນເຈົ້າ; ພວກເຂົາຈະຢ້ານກົວ, ແລະ ເຈົ້າຈະບໍ່ດຳລົງຢູ່
ອີກຕໍ່ໄປເປັນນິດ.'"
[20]ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[21]ຈົ່ງຕັ້ງຫນ້າຂອງເຈົ້າຕໍ່ສູ້ຊີໂດນ ແລະ ກ່າວຄຳທຳນວາຍຕໍ່ສູ້ນາງ.[22]ຈົ່ງກ່າວວ່າ,
'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ! ຊີໂດນເອີຍ! ເຮົາຈະໄດ້ຮັບກຽດທ່າມກາງເຈົ້າ, ເພື່ອປະຊາຊົນຂອງເຈົ້າຈະຮູ້ວ່າ
ເຮົາຄືພຣະຢາເວ ເວລາທີ່ເຮົານຳການພິພາກສາຄວາມຍຸດຕິທຳໃນເຈົ້ານັ້ນ. ເຮົາຈະສະແດງຄວາມບໍຣິສຸດຂອງເຮົາໃນເຈົ້ານັ້ນ.
[23]ເຮົາຈະສົ່ງພະຍາດລະບາດເຂົ້າມາໃນເຈົ້າ ແລະ ສົ່ງເລືອດເຂົ້າມາໃນຖະຫນົນຂອງເຈົ້າ; ຄົນທີ່ຖືກຂ້າຈະລົ້ມລົງທ່າມກາງເຈົ້າ. ເມື່ອດາບ
ມາຕໍ່ສູ້ເຈົ້າມາຈາກທຸກດ້ານ, ແລ້ວພວກເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.[24]ແລ້ວຈະບໍ່ມີຫນາມທີ່ແທງ
ຫລືຫນາມໃຫຍ່ທີ່ສຽບໃຫ້ປວດອີກຕໍ່ໄປຕໍ່ເຊື້ອສາຍອິດສະຣາເອນນັ້ນ ຊຶ່ງມາຈາກພວກທີ່ຢູ່ອ້ອມຮອບພວກເຂົາທັງຫມົດ ຊຶ່ງເຄີຍຫມິ່ນປະ-
ຫມາດປະຊາຊົນຂອງນາງ, ດັ່ງນັ້ນ ພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ ອົງພຣະຜູ້ເປັນເຈົ້າ!'
[25]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເມື່ອເຮົາຈະຮວບຮວມເຊື້ອສາຍອິດສະຣາເອນຈາກທ່າມກາງຊົນຊາດທັງຫລາຍ ຊຶ່ງພວກ-
ເຂົາໄດ້ກະຈັດກະຈາຍໄປຢູ່ນັ້ນ, ແລະ ເມື່ອເຮົາໄດ້ຖືກແຍກອອກຈາກທ່າມກາງພວກເຂົາ, ເພື່ອປະຊາຊາດທັງຫລາຍຈະໄດ້ເຫັນ,
ແລ້ວພວກເຂົາຈະສ້າງບ້ານເຮືອນຂອງເຂົາໃນແຜ່ນດິນ ຊຶ່ງເຮົາໄດ້ມອບໃຫ້ແກ່ຢາໂຄບ.[26]ແລ້ວພວກເຂົາຈະອາໄສຢູ່ໃນທີ່ນັ້ນຢ່າງປອດ-
ໄພກັບນາງ ແລະ ສ້າງບ້ານເຮືອນ, ແລະ ປູກສວນອະງຸ່ນ, ແລະ ພວກເຂົາຈະອາໄສຢູ່ຢ່າງປອດໄພ ເມື່ອເຮົາພິພາກສາຄວາມຍຸດຕິທຳຄົນທັງ-
ຫລາຍທີ່ຢູ່ອ້ອມຮອບ; ຊຶ່ງໄດ້ຫມິ່ນປະຫມາດພວກເຂົາ ແລ້ວພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ ພຣະເຈົ້າຂອງພວກເຂົາ!'"

29 1ໃນວັນທີສິບສອງ, ໃນເດືອນສິບ, ປີທີສິບ ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2"ບຸດແຫ່ງມະ-
ນຸດເອີຍ, ຈົ່ງຕັ້ງຫນ້າຂອງເຈົ້າຕໍ່ສູ້ຟາຣາໂອ, ກະສັດແຫ່ງເອຢິບ; ຈົ່ງກ່າວຄຳທຳນວາຍຕໍ່ສູ້ກະສັດ ແລະ ຊາວເອຢິບທັງຫມົດ. 3ຈົ່ງປະກາດ
ແລະ ກ່າວວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຕໍ່ສູ້ເຈົ້າ, ຟາຣາໂອ, ກະສັດແຫ່ງເອຢິບເອີຍ. ເຈົ້າຜູ້
ເປັນສັດຮ້າຍທີ່ໃນທະເລ ຊຶ່ງລີ້ຊ້ອນຢູ່ໃນກາງແມ່ນ້ຳ, ຜູ້ກ່າວວ່າ, "ແມ່ນ້ຳນີ້ເປັນຂອງຂ້ອຍ. ຂ້ອຍໄດ້ສ້າງມັນຂຶ້ນມາເພື່ອຕົນເອງ."

4ແຕ່ເຮົາຈະເອົາຫມາກເບັດກ່ຽວຄາງຂອງເຈົ້າ, ແລະ ຈະເຮັດໃຫ້ປາໃນແມ່ນ້ຳນິນຂອງເຈົ້າຕິດກັບເກັດທັງຫລາຍຂອງເຈົ້າ; ແລະ ເຮົາຈະລາກ
ເຈົ້າຂຶ້ນມາຈາກກາງແມ່ນ້ຳຂອງເຈົ້າ ພ້ອມກັບປາທັງຫລາຍໃນແມ່ນ້ຳ ຊຶ່ງຕິດຢູ່ກັບເກັດທັງຫລາຍຂອງເຈົ້າ. 5ເຮົາຈະໂຍນເຈົ້າເຂົ້າໄປໃນຖິ່ນແຫ້ງ-
ແລ້ງກັນດານ, ທັງໂຕເຈົ້າ ແລະ ປາໃນແມ່ນ້ຳທັງຫລາຍຂອງເຈົ້າ. ເຈົ້າຈະຕົກລົງພື້ນທົ່ງນາທີ່ເປົ່າວ່າງ; ເຈົ້າຈະບໍ່ຖືກເກັບ ຫລື ຮວບຮວມໄວ້. ເຮົາ
ໄດ້ມອບເຈົ້າໄວ້ໃຫ້ເປັນອາຫານຂອງສິ່ງທີ່ມີຊີວິດເທິງແຜ່ນດິນ ແລະ ນົກໃນຟ້າອາກາດທັງຫລາຍ.
6ແລ້ວຄົນທັງປວງອາໄສທີ່ຢູ່ໃນເອຢິບຈະຮູ້ວ່າ ເຮົາແມ່ນພຣະຢາເວ, ເພາະພວກເຂົາໄດ້ເປັນຢ່າງໄມ້ຄ້ອນເທົ້າຂອງເຊື້ອສາຍອິດສະຣາເອນ. 7ເມື່ອ
ພວກເຂົາຈັບເຈົ້າໄວ້ໃນມືຂອງພວກເຂົາ, ເຈົ້າກໍຫັກ ແລະ ບາດບ່າຂອງພວກເຂົາທຸກຄົນ; ແລະ ເມື່ອພວກເຂົາເພິ່ງພາເຈົ້າ, ເຈົ້າກໍຈະຫັກ, ແລະ
ເຈົ້າຈະເປັນເຫດໃຫ້ຂາຂອງພວກເຂົາສັ່ນຫມົດ.
8ດັ່ງນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະນຳດາບມາຕໍ່ສູ້ເຫນືອເຈົ້າ. ເຮົາຈະຕັດທັງມະນຸດ ແລະ ສັດໃຫ້ຂາດ
ຈາກເຈົ້າ. 9ດັ່ງນັ້ນ ແຜ່ນດິນເອຢິບຈະເປັນບ່ອນຮ້າງເປົ່າ ແລະ ເປັນຊາກທີ່ເພພັງ. ແລ້ວພວກເຂົາທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຢາເວ, ເພາະ-
ສັດຮ້າຍໃນທະເລໄດ້ກ່າວວ່າ, "ແມ່ນ້ຳນີ້ເປັນຂອງເຮົາ ເພາະເຮົາສ້າງມັນຂຶ້ນມາ." 10ເຫດສະນັ້ນ, ເບິ່ງແມ໋! ເຮົາຈະຕໍ່ສູ້ເຈົ້າ ແລະ ຕໍ່ສູ້ກັບແມ່ນ້ຳ
ທັງຫລາຍຂອງເຈົ້າ, ດັ່ງນັ້ນ ເຮົາຈະເຮັດໃຫ້ແຜ່ນດິນເອຢິບຮົກຮ້າງ ແລະ ເປົ່າວ່າງ, ແລະ ເຈົ້າຈະກາຍເປັນແຜ່ນດິນຮ້າງເປົ່າ ຕັ້ງແຕ່ມິກໂດນໄປ
ຮອດອາຊວານ ແລະ ຈົນໄປເຖິງເຂດແດນຂອງກູເຊ.
11ຈະບໍ່ມີຕີນມະນຸດຂ້າມຜ່ານມັນໄດ້, ແລະ ຈະບໍ່ມີຕີນສັດຂ້າມຜ່ານມັນໄດ້. ຈະບໍ່ມີໃຜອາໄສຢູ່ເຖິງສີ່ສິບປີ. 12ເພາະເຮົາຈະເຮັດໃຫ້ແຜ່ນດິນເອ-
ຢິບເປັນບ່ອນຮ້າງເປົ່າທ່າມກາງປະເທດຮ້າງເປົ່າທັງຫລາຍ ແລະ ທ່າມກາງເມືອງທີ່ຮົກຮ້າງທັງຫລາຍ, ແລະ ເມືອງຕ່າງໆ ທ່າມກາງເມືອງທີ່ເປົ່າ
ວ່າງຢູ່ສີ່ສິບປີ; ເຮົາຈະໃຫ້ຄົນເອຢິບກະຈັດກະຈາຍໄປທ່າມກາງປະຊາຊາດທັງຫລາຍ, ແລະ ເຮົາຈະກະຈາຍພວກເຂົາໄປຕາມດິນແດນຕ່າງໆ.
13ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເມື່ອຄົບສີ່ສິບປີແລ້ວ ເຮົາຈະຮວບຮວມຄົນເອຢິບຈາກທ່າມກາງຊົນຊາດທັງຫລາຍ
ຄືຜູ້ຖືກກະຈັດກະຈາຍໄປຢູ່ນັ້ນ. 14ເຮົາຈະນຳພວກເຂົາກັບຄືນມາຈາກການເປັນຊະເລີຍຈາກແຜ່ນດິນເອຢິບ ແລະ ນຳພວກເຂົາກັບມາຍັງແຜ່ນ-
ດິນປັດໂຣດ, ຊຶ່ງເປັນແຜ່ນດິນດັ້ງເດີມຂອງພວກເຂົາ. ແລ້ວພວກເຂົາເປັນອະນາຈັກຕ່ຳຕ້ອຍບ່ອນນັ້ນ.
15ອານາຈັກນັ້ນຈະເປັນບ່ອນທີ່ຕ່ຳຕ້ອຍທີ່ສຸດໃນບັນດາອານາຈັກທັງຫລາຍ, ແລະ ຈະບໍ່ຖືກຍົກຕົນຂຶ້ນເຫນືອປະຊາຊາດທັງຫລາຍອີກເລີຍ. ເຮົາ
ຈະລົດກຳລັງພວກເຂົາລົງຈົນພວກເຂົາຈະບໍ່ສາມາດປົກຄອງປະຊາຊາດອື່ນໄດ້ອີກຕໍ່ໄປ. 16ບັນດາຊາວເອຢິບຈະບໍ່ເປັນທີ່ໄວ້ວາງໃຈຂອງເຊື້ອສາຍ
ອິດສະຣາເອນອີກ, ແຕ່ ພວກເຂົາຈະເປັນທີ່ເຕືອນໃຈໃນຄວາມຜິດທີ່ອິດສະຣາເອນໄດ້ເຮັດແທນ ແຕ່ພວກເຂົາກັບໄປຫາເອ-
ຢິບເພື່ອຂໍຄວາມຊ່ວຍເຫລືອ. ແລ້ວພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ ອົງພຣະຜູ້ເປັນເຈົ້າ."
17ຕໍ່ມາເມື່ອວັນທີຫນຶ່ງ, ເດືອນທີຫນຶ່ງ, ໃນປີທີຊາວເຈັດ ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 18"ບຸດແຫ່ງມະນຸດເອີຍ, ເນບູກາດ-
ເນັດຊາ ກະສັດແຫ່ງບາບີໂລນໄດ້ຊົງໃຫ້ເຄື່ອນຍ້າຍກອງທັບເຮັດວຽກຫນັກໃນການຕໍ່ສູ້ ເມືອງຕີເຣຢ່າງຫນັກ. ຫົວທຸກຫົວໄດ້ຖືກຂັດຈົນຫົວ-
ລ້ານ, ແລະ ບ່າທຸກບ່າກໍເຫລີ່ນ. ເຖິງປານນັ້ນ ເຂົາເອງ ແລະ ກອງທັບຂອງເຂົາກໍບໍ່ໄດ້ຮັບຫຍັງຈາກຕີເຣ
ຈາກການທີ່ເຂົາໄດ້ເຮັດວຽກຫນັກໃນການປະຕິບັດສິ່ງເຫລົ່ານັ້ນ.
19ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເບິ່ງແມ໋! ເຮົາຈະມອບແຜ່ນດິນເອຢິບໄວ້ແກ່ເນບູກາດເນັດຊາ ກະສັດແຫ່ງບາ-
ບີໂລນ, ແລະ ເຂົາຈະນຳຄວາມຮັ່ງມີໄປ, ປຸ້ນຊັບສິ່ງບັດໄປ, ແລະ ຂົນເຄື່ອງຂອງທັງຫມົດທີ່ເຂົາພົບໃນບ່ອນນັ້ນ; ສິ່ງເຫລົ່ານັ້ນຈະເປັນຄ່າຈ້າງ
ກອງທັບຂອງເຂົາ. 20ເຮົາໄດ້ມອບແຜ່ນດິນເອຢິບໄວ້ແກ່ເຂົາ ເຫມືອນເປັນຄ່າຈ້າງໃນການງານທີ່ພວກເຂົາໄດ້ເຮັດສຳລັບເຮົາ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
21ໃນມື້ນັ້ນ ເຮົາຈະເຮັດໃຫ້ເຂົາສັດປົ່ງຂຶ້ນມາແກ່ເຊື້ອສາຍອິດສະຣາເອນ ແລະ ເຮົາຈະໃຫ້ເຈົ້າອ້າປາກເວົ້າໃນທ່າມກາງພວກເຂົາທັງຫລາຍ
ເພື່ອພວກເຂົາຈະຮູ້ວ່າເຮົາແມ່ນພຣະຢາເວ.'"

 generated on Tue Jun 17 19:01:42 2025

# 30

1ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2“ບຸດແຫ່ງມະນຸດເອີຍ, ຈົ່ງກ່າວຄຳທຳນວາຍ, ແລະ ກ່າວວ່າ 'ພຣະຢາເວ ອົງພຣະຜູ້-
ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຈົ່ງຮ້ອງໄຫ້ຄຳຄວນວ່າ, "ອະນິດຈັງ ຄືວັນທີ່ກຳລັງມາ."3ວັນນັ້ນໃກ້ເຂົ້າມາແລ້ວ. ວັນແຫ່ງພຣະຢາເວໃກ້ເຂົ້າ
ມາແລ້ວ. ເປັນມື້ທີ່ມີເມກ, ເປັນເວລາແຫ່ງຄວາມພິນາດຂອງປະຊາຊາດ.

4ແລ້ວດາບເຫລັ້ມຫນຶ່ງຈະມາຕໍ່ສູ້ເຫນືອເອຢິບ, ແລະ ຄວາມທຸກລະທົມຈະຢູ່ໃນເມືອງເບິ່ງ ເມື່ອປະຊາຊົນໄດ້ຖືກຂ້າລົ້ມລົງໃນເອຢິບ — ເມື່ອ
ພວກເຂົາຂົນຊັບສິນບັດຂອງນາງໄປ, ແລະ ເມື່ອຮາກຖານຂອງນາງຖືກທຳລາຍລົງ.5ເບິ່ງ, ລີເບຍ ແລະ ລີເດຍ, ແລະ ຄົນຕ່າງດ້າວທັງປວງ,
ພ້ອມທັງປະຊາຊົນແຫ່ງແຜ່ນດິນນັ້ນທີ່ຢູ່ໃນຂົງເຂດດັ່ງກ່າວ — ກໍຈະລົ້ມລົງພ້ອມກັບພວກເຂົາດ້ວຍດາບ.
6ພຣະຢາເວຊົງກ່າວດັ່ງນີ້ວ່າ: ດັ່ງນັ້ນ ພວກທີ່ສະຫນັບສະຫນູນເອຢິບຈະລົ້ມລົງ, ແລະ ຄວາມພາກພູມໃຈໃນກຳລັງຂອງນາງນັ້ນຈະລົດລົງ.
ຕັ້ງແຕ່ມິກໂດນໄປເຖິງສີເອເນ ພວກທະນາຫານຂອງພວກເຂົາຈະລົ້ມລົງໃນບ່ອນນັ້ນດ້ວຍດາບ — ນີ້ແມ່ນການປະກາດຂອງພຣະຢາເວ-
ອົງພຣະຜູ້ເປັນເຈົ້າ.7ພວກເຂົາຈະຢ້ານກົວໃນທ່າມກາງແຜ່ນດິນທີ່ຮົກຮ້າງວ່າງເປົ່າ, ແລະ ເມືອງທັງຫລາຍຂອງພວກເຂົາຈະຢູ່ທ່າມ-
ກາງຂອງບັນດາເມືອງຖືກຖິ້ມໃຫ້ຮ້າງເປົ່າ.
8ແລ້ວພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ, ເມື່ອເຮົາກໍ່ກອງໄຟຂຶ້ນທີ່ເອຢິບ, ແລະເມື່ອຜູ້ສະຫນັບສະຫນູນທັງຫມົດຂອງນາງຖືກທະລາຍ
ແລ້ວ.9ໃນມື້ນັ້ນ ຈະມີຜູ້ສື່ງຂ່າວຈະລົງເຮືອໄປກ່ອນເຮົາ ເພື່ອຈະເຮັດໃຫ້ຊາວກູເຊ ຢ້ານກົວຢູ່ບ່ອນນັ້ນ, ແລະ ຄວາມທຸກທໍລະມານໃຈຈະມາເຖິງ
ພວກເຂົາໃນວັນພິນາດຂອງເອຢິບ. ເພາະເບິ່ງແມ່! ວັນນັ້ນກຳລັງມາເຖິງ.
10ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະເຮັດໃຫ້ໄພ່ພົນຂອງເອຢິບສິ້ນສຸດລົງ ດ້ວຍມືຂອງເນບູກາດເນັດຊາ, ກະສັດແຫ່ງບາບີ-
ໂລນ.11ເຂົາ ແລະ ກອງທັບຂອງເຂົາ, ຊຶ່ງເປັນຊົນຊາດທີ່ທາລຸນອຳມະຫິດໃນບັນດາປະຊາຊາດທັງຫລາຍ, ຈະຖືກນຳເຂົ້າມາເພື່ອທຳລາຍແຜ່ນ-
ດິນນັ້ນ; ພວກເຂົາຈະຖອດດາບຂອງພວກເຂົາອອກຕໍ່ສູ້ເອຢິບ ແລະ ເຮັດໃຫ້ແຜ່ນດິນເຕັມໄປດ້ວຍຄົນຕາຍ.
12ເຮົາຈະເຮັດໃຫ້ແມ່ນ້ຳທັງຫລາຍແຫ້ງລົງ, ແລະ ເຮົາຈະຂາຍແຜ່ນດິນນັ້ນໄວ້ໃນມືຂອງຄົນຊົ່ວ. ເຮົາຈະເຮັດໃຫ້ແຜ່ນດິນ ແລະ ທຸກສິ່ງທຸກຢ່າງ
ທີ່ຢູ່ເທິງແຜ່ນດິນນັ້ນຮ້າງເປົ່າໂດຍມືຂອງຄົນຕ່າງດ້າວ — ເຮົາແມ່ນ, ພຣະຢາເວາ, ໄດ້ລັ່ນວາຈາແລ້ວ.
13ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະທຳລາຍຮູບເຄົາລົບທັງຫລາຍ, ແລະ ເຮົາຈະນຳຄາວສຸດທ້າຍມາໃຫ້ແກ່ຮູບເຄົາລົບ
ທີ່ບໍ່ມີຄ່າທັງຫລາຍໃນເມືອງມຳຟິດ. ໃນທີ່ນັ້ນຈະບໍ່ມີເຈົ້າຊາຍຈາກແຜ່ນດິນເອຢິບອີກຕໍ່ໄປ, ແລະ
ເຮົາຈະເອົາຄວາມຢ້ານກົວລົງເທິງແຜ່ນດິນເອຢິບ.14ແລ້ວເຮົາຈະເຮັດໃຫ້ເມືອງປັດໂຣດ ເປັນບ່ອນຮົກຮ້າງວ່າງເປົ່າ ແລະ ຈູດເມືອງໂຊອານ,
ແລະ ເຮົາຈະນຳການພິພາກສາລົງໂທດມາເທິງເມືອງເອກຂອງເທເບ.
15ເພາະເຮົາຈະຖອກຄວາມໂກດຮ້າຍຂອງເຮົາລົງເທິງເມືອງເປລູສສອຳ, ບ່ອນກຳບັງອັນເຂັ້ມແຂງຂອງເອຢິບ, ແລະ ທຳລາຍກອງກຳລັງຕ່າງໆ
ເມືອງເທເບ.16ແລ້ວເຮົາຈະໃຫ້ໄຟເຜົາໃນເອຢິບ; ເມືອງເປລູສີອຳຈະຢູ່ໃນຄວາມທຸກທໍລະມານຢ່າງຫລວງຫລາຍ, ເມືອງເທເບຈະແຕກ, ແລະ
ເມືອງມຳຟິດຈະມີສັດຕູຕໍ່ສູ້ໃນທຸກໆມື້.
17ຊາຍຫນຸ່ມຂອງເມືອງເຮລີໂອໂປລີ ແລະ ເມືອງບູບາສະຕີ ຈະລົ້ມຕາຍດ້ວຍດາບ, ແລະ ເມືອງຕ່າງໆຂອງພວກເຂົາຈະຖືກກວາດໄປເປັນຊະ-
ເລີຍ.18ໃນເມືອງຕະປັນເຮັດ, ໃນເວລາກາງເວັນຈະມືດ ເມື່ອເຮົາທຳລາຍແອກຂອງເອຢິບຢູ່ທີ່ນັ້ນ, ແລະ ຄວາມພາກພູມໃນກຳລັງຂອງເມືອງນັ້ນ
ຈະຫມົດລົງ. ຈະມີເມກມາປົກຄຸມນາງໄວ້ນັ້ນໄວ້, ແລະ ເຫລົ່າລູກສາວຂອງນາງຈະຕົກໄປເປັນຊະເລີຍ.19ເຮົາຈະພິພາກສາລົງໂທດເອຢິບ, ດັ່ງນີ້
ພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ.'"
20ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນ ເມື່ອວັນທີເຈັດ, ເດືອນທີຫນຶ່ງ, ໃນປີທີສິບເອັດ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,21“ບຸດແຫ່ງມະນຸດ
ເອີຍ, ເຮົາຈະຫັກແຂນຂອງຟາຣາໂອ ກະສັດແຫ່ງເອຢິບ. ເບິ່ງແມ່! ແຂນນັ້ນບໍ່ໄດ້ຖືກພັນໄວ້, ຫລື ຖືກຮັກສາດ້ວຍການຜ້າພັນບາດ, ເພື່ອໃຫ້-
ແຂງແຮງພໍທີ່ຈະຖືດາບ.
22ເຫດສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ, 'ເບິ່ງແມ່, ເຮົາຕໍ່ສູ້ ຟາຣາໂອ ກະສັດແຫ່ງເອຢິບ. ເພື່ອເຮົາຈະຫັກແຂນຂອງເຂົາ,
ທັງແຂນທີ່ຍັງແຂງແຮງ ແລະ ແຂນທີ່ຫັກແລ້ວນັ້ນ, ແລະ ເຮົາຈະເຮັດໃຫ້ດາບຫລຸດຈາກມືຂອງເຂົາ.23ແລ້ວເຮົາຈະເຮັດໃຫ້ຄົນເອຢິບກະຈັດກະ-
ຈາຍໄປຢູ່ທ່າມກາງປະຊາຊາດ ແລະ ຈະກະຈາຍພວກເຂົາໄປຕາມດິນແດນຕ່າງໆ.24ເຮົາຈະເສີມກຳລັງແຂນຂອງກະສັດແຫ່ງບາບີໂລນ ແລະ
ເອົາດາບຂອງເຮົາໃສ່ມືເຂົາ ເພື່ອເຮົາຈະທຳລາຍແຂນຂອງຟາຣາໂອ. ເຂົາຈະຮ້ອງຄຳຄວນຕໍ່ຫນ້າກະສັດບາບີໂລນເຫມືອນສຽງຂອງຄົນຖືກ
ບາດເຈັບໃກ້ຈະຕາຍ.
25ເພາະເຮົາຈະເສີມກຳລັງແຂນຂອງກະສັດແຫ່ງບາບີໂລນ, ຂະນະທີ່ແຂນທັງສອງເບື້ອງຂອງຟາຣາໂອຈະຕົກ. ແລ້ວພວກເຂົາທັງຫລາຍຈະຮູ້ວ່າ
ເຮົາແມ່ນພຣະຢາເວ, ເມື່ອເຮົາເອົາດາບຂອງເຮົາໃສ່ມືຂອງກະສັດແຫ່ງບາບີໂລນ; ເພື່ອເຂົາຈະໂຈມຕີແຜ່ນດິນເອຢິບດ້ວຍດາບນັ້ນ.26ດັ່ງນັ້ນ
ເຮົາຈະໃຫ້ຄົນເອຢິບກະຈັດກະຈາຍໄປຢູ່ທ່າມກາງປະຊາຊາດທັງຫລາຍ ແລະ ກະຈັດກະຈາຍພວກເຂົາໄປຍັງດິນແດນຕ່າງໆ. ແລ້ວພວກເຂົາ
ຈະຮູ້ວ່າເຮົາແມ່ນພຣະຢາເວ.'"

 generated on Tue Jun 17 19:01:42 2025

31 [1]ແລ້ວສິ່ງນີ້ກໍໄດ້ເກີດຂຶ້ນ ໃນວັນທີຫນຶ່ງ, ເດືອນທີສາມ, ໃນປີທີສິບເອັດ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,
[2]"ບຸດແຫ່ງມະນຸດເອີຍ, ຈົ່ງກ່າວແກ່ຟາຣາໂອ, ກະສັດແຫ່ງເອຢິບ, ແລະ ແກ່ປະຊາຊົນທີ່ຢູ່ອ້ອມຮອບເຂົາ, 'ໃນຄວາມເປັນໃຫຍ່ເປັນໂຕ
ຂອງເຈົ້ານັ້ນ, ເຈົ້າແມ່ນໃຜ?

[3]ເບິ່ງແມ໋! ຄົນອັດຊີເຣຍປຽບເຫມືອນກັບໄມ້ແປກໃນເລບານອນ ມີກິ່ງກ້ານທີ່ສວຍສົດງົດງາມ, ເປັນຮົ່ມໃຫ້ແກ່ປ່າ, ແລະ ສູງທີ່ສຸດ, ແລະ
ກິ່ງກ້ານທັງຫລາຍ ກໍຊູຂຶ້ນຈົນເຖິງຍອດໄມ້.[4]ມີນ້ຳຫລວງຫລາຍຫລໍ່ລ້ຽງໃຫ້ມັນໃຫຍ່ສູງ; ຄືບັນດາແມ່ນ້ຳໄຫລອອກໄປທົ່ວຕົ້ນ-
ໄມ້ເຮັດໃຫ້ມັນເຕີບໂຕ, ສາຍນ້ຳໄຫລອ້ອມຮອບບໍລິເວນນັ້ນ, ເພື່ອຮ່ອງນ້ຳທັງຫລາຍຈະສົ່ງນ້ຳໄຫລອອກໄປທົ່ວຕົ້ນໄມ້ໃນທົ່ງນາ.
[5]ມັນຈຶ່ງສູງເຫນືອຕົ້ນໄມ້ອື່ນໆໃນທົ່ງ, ແລະ ກິ່ງກ້ານຂອງມັນກໍແຕກອອກຫລາຍ; ແລະ ງ່າທັງຫລາຍທັງຂອງມັນກໍຍາວ ເພາະໄດ້ຮັບນ້ຳ
ຫລໍ່ລ້ຽງສະຫມ່ຳສະເຫມີໃນເວລາມັນເຕີບໂຕ.[6]ນົກແຕ່ລະໂຕທີ່ບິນໃນທ້ອງຟ້າ ກໍໄດ້ມາເຮັດຮັງຢູ່ເທິງງ່າໄມ້ທັງຫລາຍຂອງມັນ,
ຂະນະທີ່ສິ່ງທີ່ມີຊີວິດທຸກຢ່າງໃນທົ່ງຕ່າງໆອອກລູກຢູ່ກ້ອງຕົ້ນໄມ້ທັງຫລາຍຂອງມັນ. ບັນດາປະຊາຊາດທັງຫລາຍ ກໍອາໄສຢູ່ກ້ອງຮົ່ມເງົາຂອງມັນ.
[7]ເພາະມັນກໍງົດງາມໃນຄວາມໃຫຍ່ໂຕຂອງມັນ ແລະ ດ້ວຍຄວາມຍາວຂອງກິ່ງກ້ານທັງຫລາຍຂອງມັນ, ເພາະຮາກທັງຫລາຍຂອງມັນຢັ່ງເລິກລົງ
ໄປຍັງບ່ອນທີ່ນ້ຳຫລາຍ.
[8]ຕົ້ນແປກທີ່ຢູ່ໃນສວນຂອງພຣະເຈົ້າ ຍັງສູ້ຕົ້ນສົນບໍ່ໄດ້ເລີຍ. ບໍ່ມີຕົ້ນໄມ້ອັນໃດໃນທ່າມກາງຕົ້ນສົນ ທີ່ສູງເທົ່າກັບກິ່ງກ້ານທັງຫລາຍຂອງມັນ, ແລະ
ຕົ້ນໄມ້ຊະນິດອື່ນກໍສູງບໍ່ເທົ່າກັບງ່າຂອງມັນ. ບໍ່ມີໄມ້ຕົ້ນໃດໃນສວນຂອງພຣະເຈົ້າທີ່ມີຄວາມງາມເຫມືອນກັບມັນ.[9]ເຮົາໄດ້ເຮັດໃຫ້ມັນງົດງາມ
ດ້ວຍກິ່ງກ້ານທັງຫລາຍຂອງມັນ ແລະ ຕົ້ນໄມ້ທັງຫມົດໃນສວນເອເດນກໍອິດສາມັນ ເພາະມັນໄດ້ຢູ່ໃນສວນຂອງພຣະເຈົ້າ.
[10]ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະວ່າມັນສູງ, ແລະ ຍອດຂອງມັນຕັ້ງຂຶ້ນຢູ່ທ່າມກາງງ່າໄມ້
ທັງຫລາຍຂອງມັນ, ຈິດໃຈຂອງມັນກໍຈອງຫອງເພາະຄວາມສູງຂອງມັນ.[11]ເຮົາໄດ້ມອບມັນໄວ້ໃນມືຜູ້ມີອຳນາດຂອງບັນດາປະຊາຊາດທັງຫລາຍ,
ເພື່ອເຮັດກັບມັນຕາມຄວາມຊົ່ວຮ້າຍຂອງມັນ. ເຮົາໄດ້ໄລ່ມັນອອກໄປ.
[12]ຄົນຕ່າງດ້າວຜູ້ທີ່ທາລຸນທີ່ສຸດໃນບັນດາປະຊາຊາດທັງຫລາຍ ໄດ້ຕັດມັນລົງ ແລະ ປ່ອຍໃຫ້ມັນຕາຍ. ກິ່ງກ້ານຂອງມັນລົ້ມລົງເທິງພູເຂົາທັງ-
ຫລາຍ ແລະ ໃນເນີນພູເຂົາທັງຫມົດ, ແລະ ມັນໄມ້ທັງຫລາຍທີ່ຫັກຂອງມັນຈະນອນຢູ່ຕາມຫ້ວຍຮ່ອງທຸກຫົນທຸກໃນແຜ່ນດິນ. ແລະບັນດາຊົນ-
ຊາດທັງຫລາຍຂອງແຜ່ນດິນໂລກ ໄດ້ອອກມາຈາກກ້ອງຮົ່ມເງົາຂອງມັນ ແລະ ຫນີໄປຈາກພວກມັນເສຍ.
[13]ນົກທັງຫລາຍໃນທ້ອງຟ້າທີ່ໄດ້ອາໄສຢູ່ເທິງລຳຕົ້ນທີ່ລົ້ມລົງນັ້ນ, ແລະ ສັດປ່າທັງປວງໄດ້ມາຢັ່ງກ້ານທັງຫລາຍຂອງມັນ.
[14]ສິ່ງນີ້ໄດ້ເກີດຂຶ້ນກໍເພື່ອບໍ່ມີຕົ້ນໄມ້ທັງຫລາຍທີ່ເຕີບໃຫຍ່ຂຶ້ນຢູ່ແຄມນ້ຳອື່ນໆ ໄດ້ປົ່ງຍອດຂອງມັນໃຫ້ສູງຂຶ້ນສູ່ຕົ້ນໄມ້ທີ່ສູງທີ່ສຸດ, ແລະ
ເພື່ອບໍ່ໃຫ້ຕົ້ນໄມ້ອື່ນໆເຕີບໂຕຂຶ້ນໃກ້ແຄມນ້ຳສູງຂຶ້ນມາ ເຖິງລະດັບຄວາມສູງນັ້ນ. ເພາະພວກມັນທັງຫມົດ ຕ້ອງຖືກມອບໃຫ້ແກ່ຄວາມຕາຍ,
ລົງໄປສູ່ເບື້ອງລຸ່ມສຸດຂອງແຜ່ນດິນ, ທ່າມກາງບັນດາລູກທັງຫລາຍຂອງມະນຸດ, ດ້ວຍກັນກັບພວກທີ່ລົງໄປຍັງຂຸມຝັງສົບຄົນຕາຍ.
[15]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ໃນມື້ທີ່ມັນໄດ້ລົງໄປຍັງແດນຄົນຕາຍ ເຮົາໄດ້ນຳຄວາມໂສກເສົ້າມາຍັງແຜ່ນດິນໂລກ.
ເຮົາຈະປົກຄຸມແຫລ່ງນ້ຳເລິກໄວ້, ແລະ ເຮົາຈະກັກນ້ຳໄວ້ໃນມະຫາສະມຸດ. ເຮົາເກັບນ້ຳໃຫ່ຍທັງຫລາຍໄວ້, ແລະ ນຳຄວາມໂສກເສົ້າມາຍັງເລ-
ບານອນເພື່ອເຂົາ. ດັ່ງນັ້ນ ຕົ້ນໄມ້ທັງຫມົດຢູ່ໃນທົ່ງຈະໂສກເສົ້າເພາະເຫດນັ້ນ.
[16]ເຮົາໄດ້ເຮັດໃຫ້ປະຊາຊາດທັງຫລາຍສັ່ນສະເທືອນດ້ວຍສຽງທີ່ມັນລົ້ມລົງ, ເມື່ອເຮົາໂຍນມັນລົງໄປໃນແດນມໍລະນາ ພ້ອມກັບບັນດາຜູ້ທີ່ລົງໄປ
ໃນຂຸມຝັງສົບ. ເພື່ອເຮົາເລົ້າໂລມຕົ້ນໄມ້ທັງຫມົດໃນເອເດນໃນໂລກເບື້ອງລຸ່ມສຸດ. ສິ່ງເຫລົ່ານີ້ໄດ້ຖືກເລືອກມາແລ້ວ ແລະ ຕົ້ນໄມ້ທີ່ດີທີ່-
ສຸດຂອງເລບານອນ; ຄືຕົ້ນໄມ້ທຸກຕົ້ນທີ່ໄດ້ນ້ຳຫລໍ່ລ້ຽງ.
[17]ເພາະພວກເຂົາໄດ້ລົງໄປຍັງແດນຄົນຕາຍພ້ອມກັບມັນ, ໄປຍັງບັນດາຜູ້ທີ່ຖືກຂ້າດ້ວຍດາບ. ຄືບັນດາຜູ້ທີ່ກຳລັງເຂັ້ມແຂງ ແລະ
ບັນດາປະຊາຊາດທີ່ຢູ່ກ້ອງຮົ່ມເງົາຂອງມັນ.[18]ດັ່ງນີ້ ຕົ້ນໄມ້ຕົ້ນໃດໃນສວນເອເດນທີ່ມີຄວາມເທົ່າທຽມໃນຄວາມຮຸ່ງເຮືອງ ແລະ
ຄວາມຍິ່ງໃຫຍ່ຂອງເຈົ້າບໍ? ເພາະເຈົ້າຈະຖືກນຳລົງມາພ້ອມກັບຕົ້ນໄມ້ຂອງເອເດນໄປຍັງເບື້ອງລຸ່ມສຸດຂອງແຜ່ນດິນທ່າມກາງຜູ້ທີ່ບໍ່ໄດ້ເຂົ້າພິທີ-
ຕັດ; ເຈົ້າຈະຢູ່ກັນກັບພວກທີ່ຖືກຂ້າດ້ວຍດາບ.' ນີ້ຄືຟາຣາໂອ ແລະ ບັນດາປະຊາຊົນທັງຫມົດຂອງເຂົາ — ນີ້ເປັນຄຳປະກາດຂອງພຣະຢາເວ
ອົງພຣະຜູ້ເປັນເຈົ້າ."

 generated on Tue Jun 17 19:01:42 2025

32 [1]ສິ່ງນີ້ໄດ້ເກີດຂຶ້ນ ເມື່ອວັນທີຫນຶ່ງ, ເດືອນທີສິບສອງ, ໃນປີທີສິບສອງ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[2]“ບຸດແຫ່ງມະນຸດ
ເອີຍ, ຈົ່ງກ່າວຄຳຄ່ຳຄວນເລື່ອງຟາຣາໂອ ກະສັດແຫ່ງເອຢິບ; ແລະ ກ່າວຕໍ່ລາວວ່າ, 'ເຈົ້າເປັນເຫມືອນສິງຫນຸ່ມທ່າມກາງປະຊາ-
ຊາດທັງຫລາຍ, ແຕ່ເຈົ້າກໍເປັນເຫມືອນສັດຮ້າຍໃນທະເລທັງຫລາຍ; ເຈົ້າປັ່ນນ້ຳໃນແມ່ນ້ຳ, ເຈົ້າກວນນ້ຳໃຫ້ຂຸ່ນດ້ວຍຕີນຂອງເຈົ້າ, ແລະ
ເຮັດໃຫ້ແມ່ນ້ຳທັງຫລາຍເປັນຂີ້ຕົມ.

[3]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ດັ່ງນັ້ນ ເຮົາຈະກາງແຫຂອງເຮົາອອກເຫນືອຊົນຊາດທັງຫລາຍ, ແລະ ພວກເຂົາເຫລົ່ານັ້ນຈະ
ລາກເຈົ້າຂຶ້ນມາດ້ວຍແຫຂອງເຮົາ.[4]ເຮົາຈະປະຖິ້ມເຈົ້າໃນແຜ່ນດິນ. ແລະເຮົາຈະໂຍນເຈົ້າລົງໄປໃນທົ່ງ ແລະ ຈະເຮັດໃຫ້ນົກໃນອາກາດທັງ
ຫມົດມາຢູ່ເທິງເຈົ້າ; ແລະ ເຈົ້າຈະເຮັດໃຫ້ສັດທັງຫລາຍທີ່ອຶດຫິວທົ່ວທັງແຜ່ນດິນໄດ້ອີ່ມຫນຳສຳລານ.
[5]ເພາະເຮົາຈະເອົາເນື້ອຫນັງຂອງເຈົ້າມາວາງໄວ້ເທິງພູເຂົາທັງຫລາຍ, ແລະ ເຮົາຖົມຮ່ອມພູທັງຫລາຍດ້ວຍຊາກສົບຂອງເຈົ້າ.[6]ແລ້ວເຮົາຈະ-
ຖອກເລືອດຂອງເຈົ້າໃຫ້ໄຫລອາບທ່າມກາງພູເຂົາທັງຫລາຍ, ແລະ ຫ້ວຍຮ່ອງຕ່າງໆ ຈະເຕັມດ້ວຍເລືອດຂອງເຈົ້າ.
[7]ແລ້ວເມື່ອເຮົາກຳຈັດເຈົ້າ, ເຮົາຈະປົກຄຸມທ້ອງຟ້າໄວ້ ແລະຈະເຮັດໃຫ້ດວງດາວຂອງເຈົ້າມືດໄປ; ເຮົາຈະປິດບັງຕາເວັນໄວ້ດ້ວຍເມກ, ແລະ
ດວງເດືອນຈະບໍ່ສ່ອງສະຫວ່າງຂອງມັນ.[8]ແສງສຸກໃສທັງຫມົດຂອງທ້ອງຟ້ານັ້ນ ເຮົາຈະເຮັດໃຫ້ມືດມົວລົງເຫນືອໂຕເຈົ້າ, ແລະ ເຮົາເອົາຄວາມ
ມືດໄວ້ເຫນືອແຜ່ນດິນຂອງເຈົ້າ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
[9]ດັ່ງນັ້ນ ເຮົາຈະເຮັດໃຈຂອງປະຊາຊົນທັງຫມົດໃນແຜ່ນດິນຕ່າງໆຢ້ານກົວໄປ ທີ່ເຈົ້າບໍ່ຮູ້,
ເມື່ອເຮົາການພັງທະລາຍຂອງເຈົ້າມາທ່າມກາງປະຊາຊາດທັງຫລາຍ, ທ່າມກາງແຜ່ນດິນຕ່າງໆ ທີ່ເຈົ້າບໍ່ຮູ້ຈັກນັ້ນ.[10]ເຮົາ
ຈະເຮັດໃຫ້ປະຊາຊົນຈຳນວນຫລາຍຕົກຕະລຶງ; ເພາະບັນດາກະສັດທັງຫລາຍຂອງພວກເຂົາຈະສະທ້ານຫວັ່ນໄຫວໃນຄວາມຢ້ານ
ເມື່ອເຮົາແກວ່ງດາບຂອງເຮົາຕໍ່ຫນ້າພວກເຂົາ. ແຕ່ລະຄົນຈະໂຕສັ່ນເພາະເຈົ້າ, ໃນວັນທີ່ເຈົ້າລົ້ມລົງນັ້ນ.
[11]ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ດາບຂອງກະສັດແຫ່ງບາບີໂລນຈະມາຕໍ່ສູ້ເຈົ້າ.[12]ເຮົາຈະເຮັດໃຫ້ປະຊາຊົນຂອງເຈົ້າລົ້ມ-
ລົງດ້ວຍດາບຂອງພວກນັກຮົບ — ນັກຮົບແຕ່ລະຄົນເປັນປະຊາຊົນທີ່ໂຫດຮ້າຍ. ບັນດານັກຮົບເຫລົ່ານີ້ ຈະນຳຄວາມຈິບຫາຍມາຍັງຄວາມ
ຈອງຫອງອວດອົ່ງຂອງເອຢິບ ແລະ ປະຊາຊົນທັງຫມົດຈະຖືກທຳລາຍ.
[13]ເພາະເຮົາຈະທຳລາຍສັດລ້ຽງທັງຫມົດຈາກແຫລ່ງນ້ຳທີ່ອຸດົມສົມບູນທັງຫລາຍ; ຈະບໍ່ມີຕີນມະນຸດຄົນໃດກວນແມ່ນ້ຳເຫລົ່ານັ້ນໃຫ້ຂຸ້ນອີກ,
ຫລືຕີນຂອງສັດລ້ຽງທັງຫລາຍກໍຈະບໍ່ກວນນ້ຳນັ້ນໃຫ້ຂຸ້ນອີກເຊັ່ນກັນ.[14]ແລ້ວເຮົາຈະເຮັດໃຫ້ສາຍນ້ຳເຫລົ່ານັ້ນສະຫງົບນິ່ງ ແລະ ເຮັດໃຫ້ມັນ
ໄຫລໄປເຫມືອນນ້ຳມັນ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
[15]ເມື່ອເຮົາເຮັດໃຫ້ແຜ່ນດິນເອຢິບເປັນບ່ອນຮ້າງເປົ່າ, ເມື່ອແຜ່ນດິນຖືກປຸ້ນເອົາສິ່ງຂອງທີ່ມີຢູ່ໃນນັ້ນໄປຫມົດ, ເມື່ອເຮົາທຳລາຍທຸກຄົນທີ່ອາໄສຢູ່-
ໃນເມືອງນັ້ນ, ພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ.[16]ຢູ່ທີ່ນັ້ນຈະມີການຄ່ຳຄວນ; ລູກສາວທັງຫລາຍຂອງປະຊາຊາດຈະຮ້ອງຄ່ຳ
ຄວນເຫນືອເຂົາ; ພວກເຂົາຈະຮ້ອງຄ່ຳຄວນເຫນືອເອຢິບ, ແລະ ປະຊາຊົນຂອງພວກເຂົາທັງຫມົດຈະຮ້ອງຄ່ຳຄວນ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'"
[17]ແລ້ວສິ່ງນີ້ໄດ້ເກີດຂຶ້ນ ໃນວັນທີສິບຫ້າຂອງເດືອນ, ໃນປີທີສິບສອງ, ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[18]“ບຸດແຫ່ງມະນຸດເອີຍ,
ຈົ່ງຮ້ອງໄຫ້ເພື່ອປະຊາຊົນແຫ່ງເອຢິບ ແລະ ຈົ່ງນຳພວກເຂົາລົງໄປ — ພ້ອມທັງໂຕນາງ ແລະ ລູກສາວທັງຫມົດຂອງປະຊາຊາດທີ່ງາມສະງ່າ —
ລົງໄປຍັງເບື້ອງລຸ່ມສຸດຂອງແຜ່ນດິນດ້ວຍກັນກັບພວກທີ່ລົງໄປຍັງປາກຂຸມຝັງສົບຄົນຕາຍ.
[19]ເຈົ້າຄິດວ່າເຈົ້າສວຍງາມກວ່າຄົນອື່ນຫລື? ຈົ່ງລົງໄປ ແລະນອນລົງກັບພວກທີ່ບໍ່ໄດ້ເຂົ້າພິທີຕັດ.'[20]ພວກເຂົາຈະລົ້ມລົງທ່າມກາງພວກທີ່ຖືກຂ້າ
ດ້ວຍດາບ. ດາບໄດ້ຖືກຖອດອອກ! ນາງໄດ້ຖືກມອບໄວ້ໃຫ້ດາບ; ພວກເຂົາຈະຍຶດນາງ ແລະ ປະຊາຊົນທັງຫມົດຂອງນາງ.
[21]ພວກນັກຮົບທີ່ແຂງແຮງທີ່ສຸດໃນຊີໂອນ ຈະປະກາດກ່ຽວກັບເອຢິບ ແລະ ພັນທະມິດຂອງນາງ, ‘ພວກເຂົາໄດ້ລົງມາແລ້ວ! ພວກເຂົານອນ
ຢູ່ກັບພວກທີ່ບໍ່ໄດ້ເຂົ້າພິທີຕັດ, ກັບຄົນທັງຫລາຍທີ່ຖືກຂ້າດ້ວຍດາບ.’
[22]ອັດຊີເຣຍຢູ່ທີ່ນີ້ກັບບັນດາພັກພວກທັງຫມົດຂອງນາງ. ຂຸມຝັງສົບກໍຢູ່ອ້ອມຂ້າງນາງ; ພວກເຂົາທຸກຄົນລ້ວນຖືກຂ້າດ້ວຍດາບ.[23]ຂຸມຝັງສົບຂອງ
ຄົນເຫລົ່ານີ້ແມ່ນຢູ່ແດນມໍລະນາ, ກັບພັກພວກທັງຫມົດຂອງນາງ. ຂຸມຝັງສົບຂອງນາງແມ່ນອ້ອມຮອບໄປດ້ວຍຂຸມຝັງສົບຂອງຄົນທັງຫລາຍທີ່
ຖືກຂ້າ, ຜູ້ຊຶ່ງລົ້ມລົງດ້ວຍດາບ, ພວກເຂົາເຄີຍເຮັດໃຫ້ເກີດຄວາມໂຫດຮ້າຍໃນແຜ່ນດິນຂອງຄົນເປັນ.
[24]ເອລາມກັບປະຊາຊົນທັງຫມົດກໍຢູ່ບ່ອນນັ້ນ. ຢູ່ອ້ອມຂ້າງນາງ ລ້ວນແຕ່ແມ່ນຂຸມຝັງສົບຂອງຄົນເຫລົ່ານັ້ນທີ່ຖືກຂ້າ. ຜູ້ຊຶ່ງລົ້ມລົງດ້ວຍດາບ, ຜູ້ຊຶ່ງ
ບໍ່ໄດ້ເຂົ້າພິທີຕັດທີ່ລົງໄປຍັງເບື້ອງລຸ່ມສຸດຂອງແຜ່ນດິນ, ຜູ້ຊຶ່ງໄດ້ນຳຄວາມໂຫດຮ້າຍມາໃນແຜ່ນດິນຂອງຄົນເປັນ ແລະ
ຜູ້ທີ່ທົນຮັບຄວາມອັບອາຍຂອງຕົນ, ຮ່ວມກັບຄົນທີ່ລົງໄປຂຸມຝັງສົບຄົນຕາຍເບື້ອງເລິກສຸດ.[25]ພວກເຂົາ
ໄດ້ຕັ້ງຕຽງຫລັງຫນຶ່ງໃຫ້ກັບຊົນຊາດເອລາມ ແລະ ປະຊາຊົນທັງຫມົດໃນທ່າມກາງຜູ້ທີ່ຖືກຂ້າ; ຂຸມຝັງສົບທັງຫລາຍກໍຢູ່ອ້ອມຮອບນາງ.
ພວກເຂົາທັງຫມົດບໍ່ໄດ້ເຂົ້າສູ່ພິທີຕັດ, ຖືກແທງດ້ວຍດາບ, ເພາະວ່າພວກເຂົາໄດ້ນຳຄວາມໂຫດຮ້າຍມາໃນແຜ່ນດິນຂອງຄົນເປັນ.
ແລ້ວພວກເຂົາຕ້ອງທົນຮັບຄວາມອັບອາຍຂອງຕົນ, ພ້ອມກັບຜູ້ທີ່ລົງໄປໃນຂຸມຝັງສົບໃນແດນມໍລະນາທ່າມກາງຄົນທັງຫລາຍທີ່ຖືກຂ້າ,
ຜູ້ຊຶ່ງກຳລັງລົງໄປໃນຂຸມຝັງສົບ. ເອລາມຢູ່ທ່າມກາງພວກຜູ້ທີ່ຖືກຂ້າ.
[26]ເມເຊັກ, ຕູບານ, ແລະ ກັບປະຊາຊົນທັງຫມົດຂອງພວກເຂົາກໍຢູ່ບ່ອນນັ້ນ! ຂຸມຝັງສົບທັງຫລາຍຂອງຄົນເຫລົ່ານັ້ນຢູ່ອ້ອມຮອບພວກເຂົາ.
ພວກເຂົາທັງຫມົດບໍ່ໄດ້ເຂົ້າສູ່ພິທີຕັດ, ລ້ວນແຕ່ຖືກຂ້າດ້ວຍດາບ, ເພາະພວກເຂົາໄດ້ນຳຄວາມໂຫດຮ້າຍມາໃນແຜ່ນດິນຂອງຄົນເປັນ.[27]ພວກ-
ເຂົາບໍ່ໄດ້ນອນຢູ່ກັບພວກນັກຮົບທີ່ບໍ່ໄດ້ເຂົ້າພິທີຕັດ ຜູ້ຊຶ່ງລົງໄປຍັງແດນຄົນຕາຍພ້ອມກັບອາວຸດທັງຫລາຍຂອງສົງຄາມ, ແລະ
ດາບທັງຫລາຍຂອງພວກເຂົາຖືກວາງໄວ້ລຸ່ມຫົວຂອງພວກເຂົາ ແລະ ຄວາມຜິດບາບຂອງພວກເຂົາກໍຢູ່ເຫນືອກະດູກທັງຫລາຍຂອງພວກເຂົາ.
ເພາະວ່າ ພວກເຂົາເຄີຍເປັນນັກຮົບຜູ້ໂຫດຮ້າຍໃນແຜ່ນດິນຂອງຄົນເປັນ.
[28]ດັ່ງນັ້ນ ເຈົ້າເອງ, ເອຢິບ, ຈະຖືກທຳລາຍທ່າມກາງພວກທີ່ບໍ່ໄດ້ເຂົ້າພິທີຕັດ! ເຈົ້າຈະນອນຢູ່ກັບຄົນເຫລົ່ານັ້ນທີ່ຖືກຂ້າດ້ວຍດາບ.[29]ເອໂດມກໍຢູ່
ບ່ອນນັ້ນ ພ້ອມທັງບັນດາກະສັດ ແລະ ບັນດາເຈົ້ານຳທັງຫລາຍຂອງເຂົາ. ເຖິງແມ່ນວ່າພວກເຂົາ
ເຄີຍເຂັ້ມແຂງຫລາຍກໍຍັງຖືກນຳວາງໄວ້ກັບພວກຖືກຂ້າດ້ວຍດາບ. ພ້ອມກັບຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ, ກັບບັນດາຄົນທີ່ໄດ້ລົງໄປຍັງຂຸມຝັງສົບຄົນ
ຕາຍ.

 generated on Tue Jun 17 19:01:42 2025

30ເຈົ້າຊາຍທຸກຄົນຈາກທາງທິດເຫນືອກໍຢູ່ທີ່ນັ້ນ — ພ້ອມກັບຄົນທັງຫລາຍ ແລະ ຊາວຊີໂດນທັງຫມົດ ຜູ້ຊຶ່ງລົງໄປກັບຄົນທັງຫລາຍທີ່ຖືກຂ້າ.
ພວກເຂົາເຄີຍເປັນຜູ້ມີອໍານາດ ແລະ ເຄີຍເຮັດໃຫ້ຄົນອື່ນຢ້ານກົວ, ແຕ່ບັດນີ້ພວກເຂົາຢູ່ທີ່ນີ້ດ້ວຍຄວາມຄວາມອັບອາຍ, ກັບພວກທີ່ບໍ່ໄດ້ເຂົ້າພິ-
ທີຕັດຊຶ່ງຖືກຂ້າດ້ວຍດາບ. ພວກເຂົາຕ້ອງທົນຮັບຄວາມອັບອາຍຂອງຕົນ, ຮ່ວມກັບບັນດາຜູ້ທີ່ລົງໄປໃນຂຸມຝັງສົບຢູ່ແດນຄົນຕາຍ.
31ຟາຣາໂອຈະເບິ່ງ ແລະ ຈະເລົ້າໂລມໃຈກ່ຽວກັບປະຊາຊົນທັງຫມົດຂອງເຂົາ ຜູ້ຊຶ່ງຖືກຂ້າດ້ວຍດາບ — ຟາຣາໂອ ແລະ ໄພ່ພົນຂອງເຂົາ —
ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ. 32ເຮົາຈະວາງເຂົາໄວ້ເຫມືອນຢ່າງຄວາມໂກດຮ້າຍຂອງເຮົາມາໃນແຜ່ນດິນຂອງຄົນເປັນ,
ແຕ່ເຂົາຈະຖືກວາງໄວ້ທ່າມກາງຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ, ຄືທ່າມກາງພວກຖືກຂ້າດ້ວຍດາບ. ທັງຟາຣາໂອ ແລະ ປະຊາຊົນທັງຫມົດຂອງເຂົາ —
ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ."

 generated on Tue Jun 17 19:01:42 2025

33 1แລ້ວພຣະຄຳຂອງຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2“ບຸດແຫ່ງມະນຸດເອີຍ, ຈົ່ງບອກສິ່ງນີ້ຕໍ່ປະຊາຊົນຂອງເຈົ້າວ່າ; ແລະ
ກ່າວກັບພວກເຂົາວ່າ, 'ເມື່ອເຮົານຳດາບມາເຫນືອແຜ່ນດິນ, ແລ້ວປະຊາຊົນໃນແຜ່ນດິນນັ້ນ ຈະເລືອກເອົາຊາຍຄົນຫນຶ່ງຈາກພວກເຂົາ ແລະ
ຕັ້ງໃຫ້ເປັນຄົນເຝົ້າຍາມ. 3ເຂົາຈະແນມຫາດາບ ຂະນະທີ່ມັນມາເຫນືອແຜ່ນດິນ, ແລະ ເຂົາຈຶ່ງເປົ່າແກຂອງເຂົາ ເພື່ອເຕືອນປະຊາຊົນ! 4ຖ້າຫາກ
ປະຊາຊົນໄດ້ຍິນສຽງແກນັ້ນ ແຕ່ບໍ່ໄດ້ເອົາໃຈໃສ່ໃນສຽງເຕືອນ, ແລະ ຖ້າດາບນັ້ນມາ, ແລະ ຂ້າພວກເຂົາ,
ແລ້ວເລືອດຂອງເຂົາຈະຕົກລົງເທິງຫົວຂອງເຂົາເອງ.

5ຖ້າບາງຄົນໄດ້ຍິນສຽງແກ ແລະ ບໍ່ເອົາໃຈໃສ່ໃນສຽງເຕືອນ, ເລືອດຂອງເຂົາຈະຕົກຢູ່ກັບເຂົາເອງ; ແຕ່ຖ້າເຂົາເອົາໃຈໃສ່ຕໍ່ສຽງເຕືອນນັ້ນ,
ເຂົາກໍຈະຊ່ວຍຊີວິດຂອງຕົນໃຫ້ປອດໄພ. 6ເຖິງຢ່າງໃດກໍດີ, ຖ້າຄົນເຝົ້າຍາມເຫັນດາບມາແລ້ວ, ແຕ່ບໍ່ເປົ່າແກ, ປະຊາຊົນຈຶ່ງບໍ່ໄດ້ຮັບສຽງເຕືອນ,
ແລະ ຖ້າດາບມາ ແລະ ເອົາຊີວິດຂອງຄົນຫນຶ່ງຄົນໃດໄປ, ແລ້ວຄົນນັ້ນຕາຍ ເນື່ອງຈາກຄວາມຜິດບາບຂອງເຂົາ,
ແຕ່ເຮົາຈະລົງໂທດຄົນເຝົ້າຍາມດ້ວຍເລືອງເລືອດຂອງເຂົາ.'
7ບັດນີ້ ເຈົ້າເອງ, ບຸດແຫ່ງມະນຸດເອີຍ! ເຮົາໄດ້ຕັ້ງໃຫ້ເຈົ້າເປັນຜູ້ເຝົ້າຍາມຊົນຊາດອິດສະຣາເອນ; ເຈົ້າຈະໄດ້ຍິນຖ້ອຍຄຳຈາກປາກເຮົາ ແລະ
ຈົ່ງເຕືອນພວກເຂົາແທນເຮົາ. 8ຖ້າເຮົາປະກາດກັບຄົນຊົ່ວວ່າ. 'ໂອ ຄົນຊົ່ວ, ເຈົ້າຈະຕ້ອງຕາຍແນ່!'
ແຕ່ຖ້າເຈົ້າບໍ່ໄດ້ກ່າວເຕືອນຄົນຊົ່ວໃຫ້ກັບມາຈາກທາງຂອງເຂົາ, ແລ້ວຄົນຊົ່ວນັ້ນຈະຕ້ອງຕາຍ ເນື່ອງຈາກຄວາມຜິດບາບຂອງເຂົາ, ແຕ່ເຮົາ
ຈະເອົາເລືອດຂອງເຂົາຈາກມືເຈົ້າ! 9ແຕ່ເຈົ້າ, ຖ້າເຈົ້າໄດ້ເຕືອນຄົນຊົ່ວກ່ຽວກັບວິຖີທາງຂອງເຂົາ, ຊຶ່ງວ່າເຂົາອາດຈະຫັນກັບຈາກທາງຂອງເຂົາ,
ແລະ ຖ້າເຂົາບໍ່ກັບມາຈາກທາງຂອງເຂົາ, ແລ້ວເຂົາຈະຕ້ອງຕາຍເນື່ອງຈາກຄວາມຜິດບາບຂອງເຂົາ, ແຕ່ເຈົ້າຈະຊ່ວຍຊີວິດຂອງຕົນໃຫ້ປອດໄພ.
10ດັ່ງນັ້ນເຈົ້າ, ບຸດແຫ່ງມະນຸດເອີຍ, ຈົ່ງກ່າວກັບເຊື້ອສາຍອິດສະຣາເອນວ່າ, 'ພວກເຈົ້າເຄີຍກ່າວດັ່ງນີ້ວ່າ' "ການລະເມີດ ແລະ
ຜິດບາບທັງຫລາຍຂອງພວກເຮົາຢູ່ເຫນືອພວກເຮົາ, ແລະພວກເຮົາກໍເຊື່ອມໂຊມໄປເພາະສິ່ງເຫລົ່ານີ້! ພວກເຮົາຈະມີຊີວິດຢູ່
ໄດ້ແນວໃດ?"' 11ຈົ່ງກ່າວຕໍ່ພວກເຂົາວ່າ, 'ຢ່າງທີ່ເຮົາມີຊີວິດຢູ່ສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — ເຮົາຈຶ່ງ
ບໍ່ຍິນດີໃນຄວາມຕາຍຂອງຄົນຊົ່ວ, ແຕ່ພໍໃຈການທີ່ຄົນຊົ່ວຫັນຈາກທາງຊົ່ວຂອງເຂົາ, ແລ້ວມີຊີວິດຢູ່! ຈົ່ງກັບໃຈໃຫມ່!
ຈົ່ງກັບໃຈໃຫມ່ຈາກທາງຊົ່ວຂອງເຈົ້າ! ເພາະເປັນຫຍັງເຈົ້າຈຶ່ງຍອມຕາຍຫລື, ໂອ ເຊື້ອສາຍອິດສະຣາເອນເອີຍ?'
12ບັດນີ້, ບຸດມະນຸດເອີຍ, ຈົ່ງບອກຕໍ່ໄພ່ພົນຂອງເຈົ້າ, 'ຄວາມຊອບທຳຂອງຄົນຊອບທຳ ຈະບໍ່ສາມາດຊ່ວຍເຂົາໃຫ້ພົ້ນໄດ້ ຖ້າເຂົາເຮັດຜິດບາບ!
ການຊົ່ວທັງຫລາຍຂອງຄົນຊົ່ວນັ້ນຈະບໍ່ເຮັດໃຫ້ເຂົາລົ້ມລົງ ເມື່ອເຂົາກັບໃຈໃຫມ່ຈາກຄວາມຜິດບາບຂອງເຂົາ!
ສຳລັບຄົນຊອບທຳຈະບໍ່ອາດມີຊີວິດຢູ່ໄດ້ດ້ວຍຄວາມຊອບທຳ ຖ້າເຂົາເຮັດບາບ. 13ຖ້າເຮົາກ່າວກັບຄົນຊອບທຳວ່າ,
"ເຂົາຈະມີຊີວິດຢູ່ຢ່າງແນ່ນອນ" ແລະ ຖ້າເຂົາໄວ້ໃຈໃນຄວາມຊອບທຳຂອງເຂົາ ແລະ ແລ້ວເຮັດຄວາມຊົ່ວ,
ເຮົາຈະບໍ່ຈົດຈຳການກະທຳທີ່ຊອບທຳໃດໆຂອງເຂົາ. ເຂົາຈະຕ້ອງຕາຍເພາະຄວາມຊົ່ວ ຊຶ່ງເຂົາໄດ້ເຮັດນັ້ນ.
14ດັ່ງນັ້ນ ຖ້າເຮົາກ່າວກັບຄົນຊົ່ວວ່າ, "ເຈົ້າຈະຕາຍຢ່າງແນ່ນອນ," ແຕ່ຖ້າເຂົາກັບໃຈໃຫມ່ຈາກການເຮັດບາບຂອງເຂົາ ແລະ
ເຮັດສິ່ງທີ່ຖືກຕ້ອງແລະຄວາມຊອບທຳ — 15ຖ້າຄົນຊົ່ວຍອມຄືນຂອງຈຳນຳທີ່ເຂົາໄດ້ຮຽກຮ້ອງເອົາມາຢ່າງຊົ່ວຮ້າຍ ຫລື ເຂົາຊົດໃຊ້ສິ່ງທີ່ເຂົາ
ລັກມາ, ແລະ ຖ້າເຂົາດຳເນີນຕາມກົດບັນຍັດທີ່ເຮົາມອບໄວ້ໃຫ້ເຂົານັ້ນ ແລະ ບໍ່ໄດ້ເຮັດຜິດບາບອີກຕໍ່ໄປ —
ແລ້ວເຂົາກໍຈະມີຊີວິດຢູ່ຢ່າງແນ່ນອນ. ເຂົາຈະບໍ່ຕາຍ. 16ຄວາມຜິດບາບທັງຫມົດທີ່ເຂົາໄດ້ເຮັດມາແລ້ວ ຈະບໍ່ຖືກຈົດຈຳໄວ້ກ່າວໂທດເຂົາອີກ.
ເຂົາໄດ້ປະພຶດສິ່ງທີ່ຖືກຕ້ອງແລະຄວາມຊອບທຳແລ້ວ, ແລະ ຖ້າເຊັ່ນນັ້ນ, ເຂົາກໍຈະມີຊີວິດຢູ່ຢ່າງແນ່ນອນ!
17ແຕ່ປະຊາຊາດຂອງເຈົ້າກ່າວວ່າ, "ວິທີທາງຂອງອົງພຣະຜູ້ເປັນເຈົ້າບໍ່ຍຸດຕິທຳ!" ແຕ່ວິທີທາງຂອງພວກເຈົ້ານັ້ນແຫລະທີ່ບໍ່ຖືກຕ້ອງ! 18ເມື່ອຄົນ
ຊອບທຳຫັນກັບຈາກຄວາມຊອບທຳ ແລະ ເຮັດບາບ, ແລ້ວເຂົາຈະຕ້ອງຕາຍເພາະບາບເຫລົ່ານັ້ນ! 19ເມື່ອຄົນ
ຊົ່ວຫັນຫລັງຈາກຄວາມຊົ່ວຂອງເຂົາ, ແລະ ເຮັດສິ່ງຍຸດຕິທຳແລະຊອບທຳ, ເຂົາຈະມີຊີວິດຢູ່ໄດ້ດ້ວຍສິ່ງເຫລົ່ານັ້ນ! 20ແຕ່ເຈົ້າທັງຫລາຍກ່າວວ່າ,
"ວິທີຂອງອົງພຣະຜູ້ເປັນເຈົ້າບໍ່ຍຸດຕິທຳ!" ໂອ ເຊື້ອສາຍອິດສະຣາເອນເອີຍ, ເຮົາຈະພິພາກສາເຈົ້າຕາມການປະພຶດຂອງເຈົ້າແຕ່ລະຄົນ!”
21ສິ່ງນີ້ໄດ້ເກີດຂຶ້ນວັນທີຫ້າ, ເດືອນສິບ, ປີທີສິບສອງ, ຂອງການຖືກຈັບໄປເປັນຊະເລີຍ, ຄົນລີ້ໄພຄົນຫນຶ່ງທີ່ຫນີອອກຈາກນະຄອນເຢຣູຊາ-
ເລັມໄດ້ມາຫາຂ້ານ້ອຍວ່າ, "ນະຄອນເຢຣູຊາເລັມແຕກເສຍແລ້ວ!" 22ພຣະຫັດຂອງພຣະຢາເວໄດ້ມາເຫນືອຂ້ານ້ອຍໃນຕອນຄ່ຳ
ກ່ອນຜູ້ລີ້ໄພຄົນຫນຶ່ງມາ, ແລະ ປາກຂ້ານ້ອຍໄດ້ເປີດໃນເວລາທີ່ຊາຍຄົນນັ້ນໄດ້ມາຮອດໃນຕອນຮຸ່ງເຊົ້າ. ດັ່ງນັ້ນ
ປາກຂອງຂ້ານ້ອຍຈຶ່ງຖືກເປີດອອກ; ຂ້ານ້ອຍກໍບໍ່ໄດ້ເປັນປາກກືກອີກຕໍ່ໄປ!
23ແລ້ວພຣະຄຳຂອງພຣະຢາເວຊຶ່ງກ່າວຕໍ່ຂ້ານ້ອຍ, ກ່າວວ່າ, 24“ບຸດແຫ່ງມະນຸດເອີຍ, ປະຊາຊົນທີ່ເຄີຍອາໄສຢູ່ຕາມຫົວເມືອງຮ້າງຂອງແຜ່ນດິນ
ອິດສະຣາເອນກຳລັງເວົ້າ ແລະ ກ່າວວ່າ, ' ອັບຣາຮາມເປັນພຽງຄົນດຽວ, ເຂົາຍັງໄດ້ຮັບກຳມະສິດໃນດິນແດນນີ້,
ແຕ່ພວກເຮົາມີຈຳນວນຫລາຍຄົນ! ແຜ່ນດິນນັ້ນຈຶ່ງຕ້ອງມອບໃຫ້ເຮົາເປັນສົມບັດ.'
25ເພາະສະນັ້ນ ຈົ່ງກ່າວກັບພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຈົ່ງດື່ມເລືອດ, ແລະ ເຈົ້າເງີຍຫນ້າຂຶ້ນໄປຍັງຮູບເຄົາ-
ລົບທັງຫມົດຂອງເຈົ້າ, ແລ້ວເຈົ້າຫລັ່ງເລືອດຂອງຊົນຊາດຂອງເຈົ້າອອກ. ເຈົ້າຍັງສົມຄວນຖືກຳມະສິດທີ່ດິນນີ້ອີກບໍ? 26ພວກເຈົ້າພຶ່ງພາດາບຂອງ-
ເຈົ້າ ແລະ ເຈົ້າໄດ້ເຮັດໃນສິ່ງຫນ້າກຽດຊັງ; ຜູ້ຊາຍແຕ່ລະຄົນໄດ້ລ່ວງເກີນເມຍຂອງເພື່ອນບ້ານໃຫ້ເປັນມົນທິນ.
ເຈົ້າຍັງສົມຄວນຖືກຳມະສິດທີ່ດິນນີ້ອີກບໍ?'
27ຈົ່ງກ່າວກັບພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຢ່າງທີ່ເຮົາມີຊີວິດຢູ່ສັນໃດ, ແນ່ນອນວ່າຄົນທີ່ຢູ່ໃນຊາກເພພັງຈະ
ຖືກຂ້າຕາຍດ້ວຍດາບ, ແລະ ເຮົາຈະມອບພວກເຂົາຢູ່ໃນທົ່ງນາເປັນອາຫານຂອງສິ່ງທີ່ມີຊີວິດ, ແລະ ຜູ້ທີ່ຢູ່ໃນປ້ອມປາການແລະໃນຖ້ຳກໍ
ຈະຕາຍດ້ວຍໂລກລະບາດ. 28ແລ້ວເຮົາຈະເຮັດໃຫ້ແຜ່ນດິນຮົກຮ້າງວ່າງເປົ່າ ແລະ ຫນ້າຢ້ານກົວ ແລະ
ຄວາມຍິ່ງຈອງຫອງຂອງແຜ່ນດິນນັ້ນຈະເຖິງຄາວສິ້ນລົງ, ພູທັງຫລາຍໃນອິດສະຣາເອນຈະເປັນປ່າດົງຊາຍ, ແລະ ຈະບໍ່ມີຄົນເດີນທາງຜ່ານໄປ
ມາໄດ້.' 29ດັ່ງນັ້ນ ພວກເຂົາາຈຶ່ງຈະຮູ້ວ່າ ເຮົາແມ່ນພຣະຢາເວ, ເມື່ອເຮົາໄດ້ເຮັດໃຫ້ແຜ່ນດິນນັ້ນຮົກຮ້າງວ່າງເປົ່າ ແລະ ຫນ້າຢ້ານກົວ
ເພາະສິ່ງຫນ້າລັງກຽດທັງຫມົດທີ່ພວກເຂົາໄດ້ເຮັດນັ້ນ.

 generated on Tue Jun 17 19:01:42 2025

30ດັ່ງນັ້ນ ບັດນີ້, “ບຸດແຫ່ງມະນຸດເອີຍ, ຊົນຊາດຂອງເຈົ້າທີ່ເວົ້າເລື່ອງເຈົ້າທີ່ຂ້າງກຳແພງເມືອງ ແລະຕາມປະຕູບ້ານເຮືອນນັ້ນ ແລະເຂົາເວົ້າຕໍ່ກັນ
ແລະກັນ, ແຕ່ລະຄົນເວົ້າກັບພີ່ນ້ອງຂອງຕົນວ່າ, 'ພວກເຮົາ ຈົ່ງມາເຖີດ, ແລະມາຟັງຄຳຂອງຜູ້ະກາດພຣະຄຳ ຊຶ່ງມາຈາກພຣະຢາເວ.
31ດັ່ງນັ້ນ
ຊົນຊາດຂອງເຮົາຈຶ່ງຫລັ່ງໄຫລກັນມາເຈົ້າ, ຢ່າງທີ່ຄົນທັງຫລາຍມັກຈະເຮັດ, ແລະຈະນັ່ງຕໍ່ຫນ້າເຈົ້າ ແລະຟັງສິ່ງທີ່ເຈົ້າເວົ້າ, ແຕ່ພວກເຂົາບໍ່ໄດ້
ເຮັດຕາມ. ເພາະວ່າຖ້ອຍຄຳທີ່ຖືກຕອ້ງຢູ່ໃນປາກຂອງເຂົາ, ແຕ່ຈິດໃຈຂອງເຂົາກຳລັງຕາມຫາຜົນກຳໄລທີ່ບໍ່ເປັນທຳ.
32ສຳລັບເຈົ້າເປັນເຫມືອນຄົນຮ້ອງເພງຮັກແກ່ພວກເຂົາ, ມີສຽງມ່ວນ ແລະ ຫລິ້ນເຄື່ອງດົນຕີໄດ້ເກັ່ງ, ດັ່ງນັ້ນ ພວກເຂົາຈະຟັງສິ່ງທີ່ເຈົ້າເວົ້າ,
ແຕ່ເຂົາຈະບໍ່ເຮັດຕາມ.
33ເມື່ອສິ່ງນີ້ໄດ້ເກີດຂຶ້ນ— ເບິ່ງແມ໋! ມັນຈະເກີດຂຶ້ນ! — ແລ້ວພວກເຂົາຈະຮູ້ວ່າ ມີຜູ້ທຳນວາຍຢູ່ທ່າມກາງພວກເຂົາ.”


generated on Tue Jun 17 19:01:42 2025

# 34

1ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ, 2"ບຸດແຫ່ງມະນຸດເອີຍ, ຈົ່ງກ່າວຄຳທຳນວາຍຕໍ່ສູ້ພວກຜູ້ລ້ຽງແກະທັງຫລາຍຂອງ
ອິດສະຣາເອນ. ຈົ່ງທຳນວາຍ ແລະ ກ່າວຕໍ່ພວກເຂົາວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວແກ່ຜູ້ລ້ຽງແກະດັ່ງນີ້ວ່າ: ໄພພິບັດແກ່ພວກຜູ້
ລ້ຽງແກະຂອງອິດສະຣາເອນ ຜູ້ທີ່ລ້ຽງແຕ່ແກະຕົນເອງ. ຜູ້ລ້ຽງແກະຄວນເຝົ້າຝູງແກະບໍ່ແມ່ນບໍ? 3ພວກເຈົ້າຈະກິນສ່ວນທີ່ໄຂມັນ ແລະ
ພວກເຈົ້າຄຸມກາຍດ້ວຍແກະ. ເຈົ້າຂ້າໂຕອ້ວນພີຈາກຝູງມັນ. ເຈົ້າບໍ່ໄດ້ເບິ່ງແຍງແກະເລີຍ.

4ເຈົ້າບໍ່ໄດ້ເຮັດໃຫ້ໂຕທີ່ເປັນໂລກແຂງແຮງ, ຫລື ຮັກສາໂຕທີ່ເຈັບປ່ວຍໃຫ້ດີ. ເຈົ້າບໍ່ໄດ້ພັນບາດແຜໂຕທີ່ກະດູກຫັກ, ແລະ ເຈົ້າບໍ່ໄດ້ນຳໂຕທີ່ຫລົງ
ຝູງກັບຄືນມາ ຫລື ຊອກຫາໂຕທີ່ຫລົງຫາຍໄປ. ແຕ່ເຈົ້າກັບຄວບຄຸມແກະທັງຫມົດດ້ວຍການໃຊ້ກຳລັງ ແລະ ຄວາມທາລຸນແທນ. 5ແລ້ວພວກ
ມັນຈຶ່ງກະຈັດກະຈາຍໄປຫມົດ ເພາະບໍ່ມີຜູ້ລ້ຽງ, ແລະ ພວກມັນກໍກາຍເປັນອາຫານຂອງສັດທີ່ມີຊີວິດໃນທົ່ງ,
ຫລັງຈາກທີ່ພວກມັນໄດ້ກະຈັດກະຈາຍໄປ. 6ດັ່ງນັ້ນ ຝູງແກະຂອງເຮົາຈຶ່ງຊັດເຊພະເນຈອນໄປຕາມພູເຂົາ ແລະ ຕາມເນີນພູສູງທຸກຫນ່ວຍ, ແລະ
ມັນໄດ້ກະຈັດກະຈາຍໄປທົ່ວພື້ນແຜ່ນດິນ. ໂດຍບໍ່ມີໃຜຊອກຫາພວກມັນເລີຍ.
7ເພາະສະນັ້ນ, ຜູ້ລ້ຽງແກະທັງຫລາຍເອີຍ, ຈົ່ງຟັງພຣະຄຳຂອງພຣະຢາເວ: 8ຢ່າງທີ່ເຮົາມີຊີວິດຢູ່ສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ
ອົງພຣະຜູ້ເປັນເຈົ້າ — ເພາະວ່າຝູງແກະຂອງເຮົາໄດ້ກາຍເປັນເຫຍື່ອຂອງສັດໄດ້ຖືກລັກ ແລະ ເປັນອາຫານຂອງສັດທັງຫມົດທີ່ຢູ່ໃນທົ່ງ, ເພາະ-
ວ່າມັນບໍ່ມີຜູ້ລ້ຽງ ແລະບໍ່ມີຜູ້ລ້ຽງແກະຄົນໃດຂອງເຮົາທີ່ຊອກຫາຝູງແກະ, ແຕ່ພວກຜູ້ລ້ຽງແກະນັ້ນລ້ຽງຮັກສາຝູງແກະຂອງຕົນເອງ ແລະ ບໍ່ໄດ້
ລ້ຽງຝູງແກະຂອງເຮົາເລີຍ.
9ດັ່ງນັ້ນ, ຜູ້ລ້ຽງແກະທັງຫລາຍ, ຈົ່ງຟັງພຣະຄຳຂອງພຣະຢາເວປະກາດວ່າ: 10ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ້! ເຮົາ
ຈະຕໍ່ສູ້ຜູ້ລ້ຽງແກະທັງຫລາຍ, ແລະ ເຮົາຈະຮຽກຮ້ອງເອົາແກະຂອງເຮົາອອກຈາກມືຂອງພວກເຂົາ.
ແລ້ວເຮົາຈະໃຫ້ພວກເຂົາເຊົາລ້ຽງແກະຂອງເຮົາ; ແລະຈະບໍ່ໃຫ້ລ້ຽງແກະຂອງພວວກເຂົາອີກເຊັ່ນກັນ
ເພາະເຮົາເອົາແກະຂອງເຮົາໄປໃຫ້ພົ້ນຈາກປາກຂອງພວກເຂົາ, ເພື່ອບໍ່ໃຫ້ແກະຂອງເຮົາເປັນອາຫານຂອງພວກເຈົ້າອີກຕໍ່ໄປ.
11ເພາະພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: ເບິ່ງແມ້! ເຮົາຈະຊອກຫາແກະຂອງເຮົາ ແລະ ເຮົາລ້ຽງພວກມັນເອງ, 12ເຫມືອນຜູ້ລ້ຽງ
ແກະຊອກຫາຝູງແກະ ໃນມື້ທີ່ແກະຂອງເຂົາກະຈັດກະຈາຍໄປ. ດັ່ງນັ້ນ ເຮົາຈະຊອກຫາຝູງແກະຂອງເຮົາ, ແລະ
ເຮົາຈະຊ່ວຍພວກແກະໃຫ້ລອດພົ້ນຈາກສະຖານທີ່ທັງຫລາຍ ຊຶ່ງພວກມັນໄດ້ກະຈັດກະຈາຍໄປ ໃນມື້ທີ່ມີເມກ ແລະ ມືດຄຶ້ມ. 13ແລ້ວເຮົາຈະ
ນຳພວກມັນອອກມາຈາກທ່າມກາງຊົນຊາດທັງຫລາຍ; ເຮົາຈະຮວບຮວມພວກມັນຈາກແຜ່ນດິນຕ່າງໆ ແລະ
ນຳພວກມັນໄປໃນແຜ່ນດິນຂອງພວກມັນເອງ. ເຮົາຈະເອົາພວກມັນໄວ້ຢູ່ໃນທົ່ງຫຍ້າເທິງເນີນພູຂອງອິສຣາເອນ, ຢູ່ໃກ້ຫ້ວຍຮ່ອງ, ແລະ
ໃນດິນແດນທຸກບ່ອນທີ່ສາມາດອາໄສຢູ່ໄດ້.
14ເຮົາຈະໃຫ້ພວກມັນຢູ່ໃນທົ່ງຫຍ້າທີ່ອຸດົມສົມບູນດີ; ແລະເທິງພູເຂົາສູງທັງຫລາຍຂອງອິດສະຣາເອນ ຈະເປັນບ່ອນກິນຫຍ້າຂອງພວກມັນ.
ໃນບ່ອນນັ້ນ ພວກມັນຈະນອນລົງໃນທົ່ງຫຍ້າອຸດົມດີ ເພື່ອກິນຫຍ້າ, ໃນທົ່ງຫຍ້າອັນອຸດົມສົມບູນ, ແລະ
ພວກມັນຈະກິນຫຍ້າເທິງພູເຂົາຂອງອິດສະຣາເອນ. 15ເຮົາເອງຈະເປັນຜູ້ລ້ຽງຝູງແກະຂອງເຮົາ, ແລະ ເຮົາເອງຈະເຮັດໃຫ້ພວກມັນນອນລົງ —
ນີ້ເປັນຄຳະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ — 16ເຮົາຈະຊອກຫາແກະໂຕທີ່ສູນຫາຍໄປ ແລະ ຈະນຳມັນກັບຄືນມາ. ເຮົາຈະພັນບາດ
ແຜໃຫ້ແກະບາດເຈັບ ແລະ ປິ່ນປົວແກະບໍ່ສະບາຍ ແຕ່ໂຕທີ່ຕຸ້ຍພີ ແລະ ແຂງແຮງນັ້ນ ເຮົາຈະທຳລາຍ. ເຮົາຈະເປັນຜູ້ລ້ຽງທີ່ມີຄວາມຍຸດຕິທຳ.
17ດັ່ງນັ້ນ ບັດນີ້, ພວກເຈົ້າເປັນຝູງແກະຂອງເຮົາ — ອັນໃດເປັນສິ່ງທີ່ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວ — ເບິ່ງແມ້, ເຮົາຈະເປັນຜູ້ພິພາກ-
ສາ ລະຫວ່າງ ແກະກັບແກະ, ລະຫວ່າງແບ້ຜູ້ກັບແບ້ແມ່. 18ການທີ່ພວກເຈົ້າຫາກິນໃນທົ່ງຫຍ້າຢ່າງດີນັ້ນ ຍັງບໍ່ພຽງພໍບໍ, ເຈົ້າຈຶ່ງເອົາຕີນຢຽບຢໍ່າ
ສິ່ງທີ່ເຫລືອຢູ່ຈາກທົ່ງຫຍ້າຂອງເຈົ້າ; ແລະ ດື່ມນໍ້າທີ່ໄສແລ້ວ, ຊຶ່ງເປັນສິ່ງທີ່ເຈົ້າຕ້ອງກວນມັນໃຫ້ເປັນຂີ້ຕົມດ້ວຍຕີນຂອງເຈົ້າ? 19ແກະຂອງເຮົາ
ຕ້ອງກິນສິ່ງທີ່ຕີນຂອງເຈົ້າຢຽບຢໍ່າ, ແລະ ຕ້ອງດື່ມນໍ້າທີ່ຕີນຂອງເຈົ້າເຮັດໃຫ້ຂຸ່ນບໍ?
20ດັ່ງນັ້ນແຫລະ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວກັບພວກເຈົ້າດັ່ງນີ້ວ່າ: ເບິ່ງແມ້! ເຮົາເອງຈະເປັນຜູ້ພິພາກສາລະຫວ່າງ ແກະຕຸ້ຍແລະ
ແກະຈ່ອຍ, 21ເພາະວ່າເຈົ້າໄດ້ເອົາຂ້າງແລະໄຫລ່ດັນພວກເຂົາ, ແລະ ເຈົ້າຊົນແກະທຸກໂຕທີ່ອ່ອນແອດ້ວຍເຂົາຂອງເຈົ້າ
ຈົນກວ່າເຈົ້າເຮັດໃຫ້ພວກມັນກະຈັດກະຈາຍໄປຈາກແຜ່ນດິນ.
22ເຮົາຈະຊ່ວຍແກະຂອງເຮົາໃຫ້ລອດພົ້ນ ແລະ ພວກມັນຈະບໍ່ເປັນເຫຍື່ອອີກຕໍ່ໄປ, ແລະ ເຮົາຈະພິພາກສາ ລະຫວ່າງ ແກະກັບແກະ! 23ເຮົາຈະ-
ຕັ້ງຜູ້ລ້ຽງແກະຄົນຫນຶ່ງໄວ້ເຫນືອພວກມັນ, ຄືດາວິດຜູ້ຮັບໃຊ້ຂອງເຮົາ, ເຂົາຈະເບິ່ງແຍງພວກມັນ, ເຂົາຈະລ້ຽງພວກມັນ, ແລະ ເຂົາຈະເປັນ
ຜູ້ລ້ຽງພວກມັນ. 24ເພາະເຮົາຄື, ພຣະຢາເວ, ຈະເປັນພຣະເຈົ້າຂອງພວກເຂົາ, ແລະ ສ່ວນດາວິດຜູ້ຮັບໃຊ້ຂອງເຮົາ ຈະເປັນເຈົ້າຊາຍທ່າມກາງ
ຂອງພວກເຂົາ — ເຮົາຄື, ພຣະຢາເວ, ໄດ້ປະກາດດັ່ງນີ້ແລ້ວ.
25ແລ້ວເຮົາຈະໃຫ້ຄຳຫມັ້ນສັນຍາແຫ່ງສັນຕິສຸກກັບພວກມັນ ແລະ ເອົາສັດຮ້າຍອອກຈາກແຜ່ນດິນ,
ເພື່ອວ່າພວກມັນຈະອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານໄດ້ຢ່າງປອດໄພ ແລະ ນອນຢູ່ໃນປ່າໄດ້ຢ່າງປອດໄພ. 26ເຮົາ
ຈະນຳການອວຍພອນມາເຫນືອພວກມັນ ແລະ ສະຖານທີ່ອ້ອມຮອບເນີນພູເຂົາຂອງເຮົາ, ເພື່ອເຮົາຈະສົ່ງຝົນລົງມາຕາມລະດູການ.
ນີ້ຈະເປັນສາຍຝົນແຫ່ງພຣະພອນ. 27ແລ້ວຕົ້ນໄມ້ໃນທົ່ງຫຍ້າຈະເກີດຫມາກ, ແລະ ພື້ນດິນຈະເກີດຜົນຜະລິດ. ແກະທຸກໆໂຕຂອງເຮົາຈະມີຊີວິດ
ຢູ່ໃນແຜ່ນດິນຂອງມັນເອງຢ່າງປອດໄພ; ແລ້ວພວກມັນຈະຮູ້ວ່າ ເຮົາຄືພຣະຢາເວ, ເມື່ອເຮົາຫັກແອກຂອງພວກມັນແລ້ວ,
ແລະເມື່ອເຮົາຊ່ວຍເຫລືອພວກມັນຈາກມືຂອງຄົນເຫລົ່ານັ້ນທີ່ເຮັດໃຫ້ພວກມັນຕົກເປັນທາດ.
28ພວກມັນຈະບໍ່ຖືກປຸ້ນຈາກບັນດາປະຊາຊາດອື່ນອີກຕໍ່ໄປ, ແລະ ພວກສັດປ່າເທິງໂລກກໍຈະບໍ່ກັດກິນພວກມັນ. ແລ້ວພວກມັນຈະຢູ່ຢ່າງປອດໄພ,
ແລະ ຈະບໍ່ມີໃຜມາເຮັດໃຫ້ພວກມັນຢ້ານກົວອີກ. 29ເພາະເຮົາຈະສ້າງບ່ອນປູກຝັງທີ່ສະຫງົບສຸກແກ່ພວກມັນ ເພື່ອພວກມັນຈະບໍ່ເປັນເຫຍື່ອຂອງ
ຄວາມອຶດຢາກໃນແຜ່ນດິນອີກຕໍ່ໄປ, ແລະ ບັນດາປະຊາຊາດ ຈະບໍ່ໄດ້ຫຍໍ້ຫຍັນພວກເຂົາອີກ.

 generated on Tue Jun 17 19:01:42 2025

[30]ແລ້ວພວກມັນຈະຮູ້ວ່າ, ເຮົາຄື, ພຣະຢາເວ ອົງຜູ້ເປັນເຈົ້າ, ຜູ້ສະຖິດກັບພວກເຂົາ. ພວກເຂົາເປັນປະຊາຊົນຂອງເຮົາ, ຄືເຊື້ອສາຍຂອງ
ອິດສະຣາເອນ — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ. [31]ເພາະພວກເຈົ້າເປັນແກະຂອງເຮົາ, ຊຶ່ງເປັນແກະໃນທົ່ງຫຍ້າຂອງເຮົາ,
ແລະ ປະຊາຊົນຂອງເຮົາ, ແລະເຮົາເປັນພຣະເຈົ້າຂອງພວກເຈົ້າ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'"

 generated on Tue Jun 17 19:01:42 2025

35 1ແລ້ວພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,2“ບຸດແຫ່ງມະນຸດເອີຍ, ຈົ່ງຕັ້ງຫນ້າຕໍ່ສູ້ພູເຂົາເສອີ ແລະ ກ່າວຄຳທຳນວາຍຕໍ່ສູ້
ມັນ.3ຈົ່ງກ່າວກັບມັນວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ້! ເຮົາຈະຕໍ່ສູ້ເຈົ້າ, ພູເຂົາເສອີເອີຍ, ແລະ ເຮົາຈະຍົກມື
ຂອງເຮົາຕໍ່ສູ້ເຈົ້າ ແລະ ເຮັດໃຫ້ເຈົ້າຮົກຮ້າງວ່າງເປົ່າ ແລະ ຫນ້າຢ້ານກົວ.

4ເຮົາຈະໃຫ້ເມືອງທັງຫລາຍຂອງເຈົ້າເປັນຊາກຫັກພັງ, ແລະເຈົ້າຈະເປັນບ່ອນຮົກຮ້າງວ່າງເປົ່າ; ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.
5ເພາະເຈົ້າໄດ້ເປັນສັດຕູຕໍ່ຊົນຊາດອິດສະຣາເອນ, ແລະ ເພາະເຈົ້າໄດ້ຖອກເທພວກເຂົາໄວ້ໃຫ້ແກ່ມືທັງຫລາຍທີ່ຖືດາບໃນຍາມແຫ່ງຄວາມທຸກ
ລຳບາກ, ໃນຍາມທີ່ການລົງໂທດທີ່ໃຫຍ່ຍິ່ງຂອງພວກເຂົາ.
6ເພາະສະນັ້ນ, ຢ່າງທີ່ເຮົາມີຊີວິດຢູ່ສັນນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນ — ເຮົາຈະຕຽມເຈົ້າສຳລັບການນອງເລືອດ,
ແລະດ້ວຍນອງເລືອດນີ້ຈະໄລ່ນຳເຈົ້າ! ເພາະເຈົ້າບໍ່ໄດ້ກຽດຊັງການນອງເລືອດ, ການນອງເລືອດຈະໄລ່ນຳເຈົ້າໄປສັນນັ້ນ.
7ເຮົາຈະເຮັດໃຫ້ພູເຂົາເສອີຮ້າງເປົ່າ ເມື່ອເຮົາຕັດຜູ້ທີ່ໄດ້ຜ່ານໄປແລະກັບມາອີກຄັ້ງ.8ແລ້ວເຮົາຈະເຮັດໃຫ້ພູເຂົາເຕັມດ້ວຍຜູ້ຄົນຕາຍ. ໂນນພູ
ທັງຫລາຍ ແລະ ຕາມຮ່ວມພູທັງຫລາຍ ແລະ ໃນຫ້ວຍຮ່ອງທັງຫມົດຂອງເຈົ້າ — ຜູ້ທີ່ຖືກຂ້າດ້ວຍດາບຈະລົ້ມລົງໃນພວກເຂົາ.9ເຮົາຈະເຮັດໃຫ້
ເຈົ້າເປັນບ່ອນຮ້າງເປົ່າເປັນນິດ. ເມືອງທັງຫລາຍຂອງເຈົ້າຈະບໍ່ມີຄົນອາໄສຢູ່, ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ.
10ເຈົ້າໄດ້ກ່າວວ່າ, "ປະຊາຊາດທັງສອງນີ້ ແລະ ແຜ່ນດິນທັງສອງນີ້ຈະກາຍມາເປັນຂອງເຮົາ, ແລະ ເຮົາຈະເອົາພວກເຂົາມາເປັນກຳມະສິດ,"
ເຖິງແມ່ນພຣະຢາເວສະຖິດກັບພວກເຂົາ.11ເພາະສະນັ້ນ, ຢ່າງທີ່ເຮົາມີຊີວິດຢູ່ສັນໃດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ
— ດັ່ງນັ້ນ ເຮົາຈະເຮັດຕໍ່ເຈົ້າຕາມຄວາມຄຽດຮ້າຍ ແລະ ຕາມຄວາມອິດສາຂອງເຈົ້າ, ຊຶ່ງເຈົ້າໄດ້ມີຕໍ່ພວກເຂົາເພາະຄວາມກຽດຊັງ
ຂອງອິດສະຣາເອນ, ແລະ ເຮົາຈະສະແດງໂຕຂອງເຮົາໃນຫມູ່ພວກເຂົາ ເມື່ອເຮົາພິພາກສາເຈົ້າ.
12ດັ່ງນັ້ນ ເຈົ້າຈະຮູ້ວ່າ ເຮົາແມ່ນພຣະຢາເວ. ເຮົາໄດ້ຍິນຄຳດູຖູກທັງຫລາຍທີ່ເຈົ້າໄດ້ເວົ້າຕໍ່ສູ້ພູເຂົາທັງຫລາຍແຫ່ງອິດສະຣາເອນວ່າ,
ເມື່ອເຈົ້າເວົ້າວ່າ, "ພວກມັນຖືກທຳລາຍ; ພວກມັນຖືກມອບໄວ້ໃຫ້ເຮົາທຳລາຍລ້າງ."13ເຈົ້າໄດ້ຍົກຕົນເອງຂຶ້ນຕໍ່ສູ້ເຮົາດ້ວຍສິ່ງທີ່ເຈົ້າໄດ້ເວົ້າແລ້ວ,
ແລະ ເຈົ້າໄດ້ກ່າວອີກຫລາຍຢ່າງຕໍ່ສູ້ເຮົາ; ແລະ ເຮົາໄດ້ຍິນທັງຫມົດແລ້ວ.
14ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາຈະເຮັດໃຫ້ເຈົ້າຮ້າງເປົ່າ, ຂະນະທີ່ຊົນຊາດທັງຫມົດຊື່ນບານ.
15ຢ່າງທີ່ເຈົ້າມ່ວນຊື່ນກັບມໍລະດົກແຫ່ງເຊື້ອສາຍອິດສະຣາເອນນັ້ນ ເພາະມັນຖືກໃຫ້ຮ້າງເປົ່າໄປ, ເຮົາກໍຈະເຮັດເຊັ່ນນັ້ນກັບເຈົ້າ.
ເຈົ້າຈະກາຍເປັນບ່ອນຮົກຮ້າງວ່າງເປົ່າ, ໂອ ພູເຂົາເສອີເອີຍ, ແລະ ລວມທັງເອໂດມ — ທັງຫມົດເລີຍ! ແລ້ວພວກເຂົາທັງຫລາຍຈະຮູ້ວ່າ ເຮົາ
ແມ່ນພຣະຢາເວ.'"

 generated on Tue Jun 17 19:01:42 2025

36 [1]"ບັດນີ້ ເຈົ້າ, ບຸດແຫ່ງມະນຸດເອີຍ, ຈົ່ງກ່າວຄຳທຳນວາຍຕໍ່ບັນດາພູທັງຫລາຍແຫ່ງອິດສະຣາເອນ, ແລະ ຈົ່ງກ່າວວ່າ, 'ພູທັງຫລາຍແຫ່ງ
ອິດສະຣາເອນເອີຍ, ຈົ່ງຟັງພຣະຄຳຂອງພຣະຢາເວ.[2]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ສັດຕູໄດ້ເວົ້າເຖິງເຈົ້າວ່າ, "ດີແລ້ວ!"
ແລະວ່າ! "ສະຖານສູງຂອງບັນພະບູລຸດໄດ້ຕົກເປັນກຳມະສິດຂອງເຮົາແລ້ວ."[3]ເພາະສະນັ້ນ ຈົ່ງກ່າວຄຳທຳນວາຍ ແລະ ເວົ້າວ່າ, 'ພຣະຢາເວ
ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະການຖືກຮ້າງເປົ່າ ແລະ ການຖືກຕີທີ່ມາແກ່ພວກເຈົ້າທຸກດ້ານ, ຈົນເຮັດໃຫ້ເຈົ້າຕົກເປັນກຳມະສິດຂອງ
ປະຊາຊາດອື່ນໆນັ້ນ; ພວກເຈົ້າກາຍເປັນຂີ້ປາກ ແລະ ເປັນທີ່ນິນທາ, ແລະ ເປັນເລື່ອງເລົ່າຂອງປະຊາຊົນ.

[4]ເພາະສະນັ້ນ, ພູທັງຫລາຍແຫ່ງອິດສະຣາເອນເອີຍ, ຈົ່ງຟັງ ພຣະຄຳຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ແກ່ພູເຂົາ ແລະ
ເນີນພູສຸງທັງຫລາຍ, ຫ້ວຍຮ່ອງ ແລະ ຮ່ອມພູທັງຫລາຍ, ບ່ອນທີ່ຖືກຮົກຮ້າງວ່າງເປົ່າ ແລະ ບັນດາເມືອງທີ່ຖືກປະຖິ້ມ ໄດ້ກາຍເປັນອັນທີ່ເຍາະ-
ເຍີ້ຍ ແລະ ນິນທາຈາກປະຊາຊາດທັງປວງທີ່ເຫລືອຊຶ່ງຢູ່ອ້ອມຮອຍພວກເຂົາ —[5]ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ:
ເຮົາໄດ້ກ່າວດ້ວຍໄຟແຫ່ງຄວາມໂກດຮ້າຍຕໍ່ສູ້ປະຊາດທັງຫລາຍ, ຕໍ່ສູ້ເອໂດມ ແລະຄົນທັງປວງທີ່ເອົາແຜ່ນດິນຂອງເຮົາໄປເປັນກຳມະສິດດ້ວຍ,
ຕໍ່ສູ້ຜູ້ທີ່ມີຄວາມຊື່ນບານຢູ່ເຕັມຫົວໃຈ ແລະ ມີຄວາມມຸ້ງຮ້າຍໃນໃຈ, ເມື່ອເຂົາໄດ້ຢຶດດິນແດນຂອງເຮົາໄວ້ໃນທົ່ງຫຍ້າສຳລັບຕົນ.'[6]ເພາະສະນັ້ນ,
ຈົ່ງກ່າວຄຳທຳນວາຍຕໍ່ແຜ່ນດິນອິດສະຣາເອນ ແລະ ຈົ່ງກ່າວແກ່ພູ ແລະ ເນີນພູສູງທັງຫລາຍ, ຫ້ວຍຮ່ອງ ແລະ ຮ່ວມພູທັງຫລາຍ, 'ພຣະຢາເວ
ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາກ່າວດ້ວຍຄວາມໂມໂຫ ແລະຄວາມໂກດຮ້າຍ, ເຮົາປະກາດວ່າ ເພາະພວກເຈົ້າໄດ້
ເກີດມາເພື່ອຖືກດູຖູກຈາກປະຊາຊາດທັງປວງ.
[7]ເພາະສະນັ້ນ, ພຣະຄຳຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຮົາເອງຈະປະຕິຍານວ່າ ປະຊາຊາດທີ່ຢູ່ອ້ອມຮອບພວກເຈົ້ານັ້ນ
ຈະໄດ້ຮັບຄວາມອັບອາຍຂາຍຫນ້າຂອງຕົນເອງຢ່າງແນ່ນອນ.
[8]ແຕ່ພວກເຈົ້າ, ພູທັງຫລາຍແຫ່ງອິດສະຣາເອນເອີຍ, ພວກເຈົ້າຈະແຕກກິ່ງງ່າຂອງພວກເຈົ້າອອກມາ ແລະ ຈະເກີດຫມາກໃຫ້ແກ່ຊົນຊາດ
ອິດສະຣາເອນໄພ່ພົນຂອງເຮົາ, ເພາະວ່າພວກເຂົາຈະກັບມາໃນບໍ່ດົນນີ້.[9]ເພາະເບິ່ງແມ໋, ເຮົາເບິ່ງແຍງພວກເຈົ້າດ້ວຍຄວາມໂປດປານ;
ພວກເຈົ້າຈະໄດ້ຮັບການໄຖ່ ແລະ ຖືກຫວ່ານດ້ວຍເມັດພືດ.
[10]ດັ່ງນັ້ນ ພວກເຈົ້າພູທັງຫລາຍເອີຍ, ເຮົາຈະຂະຫຍາຍຈຳນວນຜູ້ຊາຍທັງຫລາຍໃຫ້ແກ່ເຊື້ອສາຍຂອງອິດສະຣາເອນ, ທັງຫມົດຂອງພວກເຂົາ.
ເມືອງທັງຫລາຍຈະເປັນບ່ອນພັກພາອາໄສຂອງຄົນ ແລະ ສະຖານທີ່ອັນຮ້າງເປົ່າຈະຖືກສ້າງຂຶ້ນໃຫມ່.[11]ເຮົາຈະຂະຫຍາຍຈຳນວນຄົນ ແລະ
ສັດທັງຫລາຍທີ່ຢູ່ເທິງພູທັງຫລາຍ ເພື່ອພວກເຈົ້າເພີ່ມພູນຂຶ້ນ ແລະ ຈະອອກແມ່ແຜ່ລູກ. ແລ້ວ
ເຮົາຈະເປັນເຫດໃຫ້ພວກເຈົ້າມີທີ່ພັກພາອາໄສຫລາຍກວ່າໃນອະດີດ, ແລະ ເຮັດໃຫ້ພວກເຈົ້າຮຸ່ງເຮືອງຫລາຍກວ່າແຕ່ກ່ອນ, ເພື່ອພວກເຈົ້າ
ຈະຮູ້ວ່າ ເຮົາແມ່ນພຣະຢາເວ.[12]ເຮົາຈະນຳພາບັນດາຜູ້ຊາຍມາ, ຄືອິດສະຣາເອນໄພ່ພົນຂອງເຮົາ. ພວກເຂົາຈະເປັນເປັນກຳມະສິດຂອງເຈົ້າ,
ແລະ ພວກເຈົ້າກໍຈະກາຍເປັນມໍລະດົກຂອງພວກເຂົາ, ແລະ ເຈົ້າຈະບໍ່ເປັນເຫດເຮັດໃຫ້ລູກຫລານຂອງພວກເຂົາຕ້ອງຕາຍອີກໄປອີກ.
[13]ພຣະຄຳຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເພາະພວກເຂົາກ່າວແກ່ເຈົ້າວ່າ, "ພວກເຈົ້າກິນຄົນ, ແລະ
ລູກຫລານຂອງປະຊາຊາດຂອງພວກເຈົ້າຕ້ອງຕາຍ,"[14]ເພາະສະນັ້ນ ພວກເຈົ້າຈະບໍ່ໄດ້ກິນຄົນອີກຕໍ່ໄປ, ແລະ ຈະບໍ່
ເຮັດໃຫ້ປະຊາຊາດຂອງພວກເຈົ້າໂສກເສົ້າດ້ວຍຄວາມຕາຍອີກຕໍ່ໄປ. ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.[15]ເຮົາຈະບໍ່ໃຫ້
ພວກເຈົ້າໄດ້ຍິນຄຳຫມິ່ນປະຫມາດຂອງປະຊາຊາດຕ່າງໆອີກຕໍ່ໄປ; ພວກເຈົ້າຈະບໍ່ຕ້ອງທົນຮັບເອົາຄວາມອັບອາຍຂາຍຫນ້າຂອງຊົນຊາດທັງ-
ຫລາຍອີກ, ຫລືສິ່ງທີ່ເປັນເຫດໃຫ້ຊົນຊາດຂອງພວກເຈົ້າລົ້ມລົງ — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ'"
[16]ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,[17]"ບຸດແຫ່ງມະນຸດເອີຍ, ເມື່ອເຊື້ອສາຍຂອງອິດສະຣາເອນ ອາໄສຢູ່ໃນແຜ່ນດິນຂອງ-
ພວກເຂົາ, ພວກເຂົາໄດ້ເຮັດໃຫ້ແຜ່ນດິນເປັນມົນທິນ. ດ້ວຍວິທີທາງຂອງພວກເຂົາເຫລົ່ານີ້ເຮັດໃຫ້ພວກເຂົາເປັນມົນ-
ທິນເຫມືອນພວກຜູ້ຍິງມີລະດູຕໍ່ຫນ້າເຮົາ.[18]ເພາະສະນັ້ນ, ເຮົາຈຶ່ງຖອກເທຄວາມໂມໂຫຂອງເຮົາອອກມາຕໍ່ສູ້ພວກເຂົາດ້ວຍເລືອງໂລ-
ຫິດ ຊຶ່ງພວກເຂົາໄດ້ຖອກເຫລົ່ງເທິງແຜ່ນດິນ ແລະ ດ້ວຍເລືອງຮູບເຄົາລົບທັງຫລາຍຂອງພວກເຂົາ.
[19]ເຮົາໄດ້ກະຈັດກະຈາຍພວກເຂົາໄປທ່າມກາງບັນດາປະຊາຊາດ; ພວກເຂົາໄດ້ຖືກກະຈັດກະຈາຍໄປຕາມດິນແດນຕ່າງໆ. ເຮົາໄດ້ພິພາກສາ
ພວກເຂົາຕາມວິທີທາງ ແລະ ການກະທຳຂອງພວກເຂົາເອງ.[20]ແລ້ວພວກເຂົາໄປຫາບັນດາປະຊາຊາດຕ່າງໆ, ແລະ ບໍ່ວ່າໄປເຖິງບ່ອນໃດກໍຕາມ,
ພວກເຂົາໄດ້ເຮັດໃຫ້ພຣະນາມບໍຣິສຸດຂອງເຮົາເຊື່ອມເສຍ ເມື່ອຄົນທັງຫລາຍເວົ້າເຖິງພວກເຂົາວ່າ, 'ຄົນເຫລົ່ານີ້ເປັນປະຊາກອນຂອງ
ພຣະຢາເວແທ້ບໍ? ເພາະພວກເຂົາຖືກໂຍນອອກຈາກແຜ່ນດິນຂອງພຣະອົງ?'[21]ແຕ່ເຮົາຍັງມີຄວາມເປັນຫ່ວງພຣະນາມບໍຣິສຸດຂອງເຮົາ ຊຶ່ງ
ຊົນຊາດອິດສະຣາເອນ ໄດ້ເຮັດໃຫ້ເຊື່ອມເສຍກຽດທ່າມກາງປະຊາຊາດທີ່ພວກເຂົາໄດ້ໄປນັ້ນ.
[22]ເພາະສະນັ້ນ ຈົ່ງກ່າວຕໍ່ປະຊາຊົນອິດສະຣາເອນວ່າ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ:
ເຮົາຈະບໍ່ເຮັດສິ່ງເຫລົ່ານີ້ເພາະເຫັນແກ່ກພວກເຈົ້າ, ເຊື້ອສາຍຂອງອິດສະຣາເອນເອີຍ, ແຕ່ເພາະເຫັນແກ່ພຣະນາມອັນບໍຣິສຸດຂອງເຮົາ,
ຊຶ່ງພວກເຈົ້າໄດ້ເຮັດໃຫ້ເຊື່ອມເສຍກຽດທ່າມກາງປະຊາຊາດໃນທຸກບ່ອນທີ່ພວກເຈົ້າເຈົ້າໄປນັ້ນ.
[23]ເພາະເຮົາຈະເຮັດໃຫ້ພຣະນາມຂອງເຮົາຍິ່ງໃຫຍ່ ຊຶ່ງເຈົ້າໄດ້ເຮັດໃຫ້ຖືກຫມິ່ນປະຫມາດໃນທ່າມກາງປະຊາຊາດທັງປວງ —
ໃນທ່າມກາງປະຊາຊາດທັງຫລາຍ, ທີ່ເຈົ້າຫມິ່ນປະມາດນັ້ນ. ແລ້ວປະຊາຊາດທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຢາເວ —
ນີ້ເປັນຄຳປະກາດຂອງພຣະຢາເວປອົງພຣະຜູ້ເປັນເຈົ້າ — ເມື່ອພວກເຈົ້າໄດ້ເຫັນວ່າ ເຮົາບໍຣິສຸດ.
[24]ເຮົາຈະນຳພວກເຈົ້າອອກຈາກທ່າມກາງປະຊາຊາດທັງຫລາຍ ແລະ ຮວບຮວມພວກເຈົ້າຈາກທຸກດິນແດນ. ແລະ ເຮົາຈະນຳພວກເຈົ້າເຂົ້າມາ-
ໃນແຜ່ນດິນຂອງພວກເຈົ້າເອງ.[25]ແລ້ວເຮົາຈະເອົານ້ຳສະອາດຫົດສິ່ງໃຫ້ພວກເຈົ້າ
ເພື່ອພວກເຈົ້າຈະສະອາດຈາກສິ່ງທີ່ບໍ່ສະອາດທັງຫລາຍຂອງພວກເຈົ້າ, ແລະເຮົາຊຳລະພວກເຈົ້າຈາກຮູບເຄົາລົບທັງຫລາຍຂອງພວກເຈົ້າ.
[26]ເຮົາຈະເອົາຫົວໃຈໃຫມ່ໃຫ້ແກ່ພວກເຈົ້າ ແລະ ບັນຈຸຈິດວິນຍານໃຫມ່ໄວ້ພາຍໃນພວກເຈົ້າ, ແລະ ເຮົາຈະນຳໃຈຫີນອອກຈາກເນື້ອກາຍຂອງ
ພວກເຈົ້າ. ເພື່ອເອົາໃຈເນື້ອໃຫ້ແກ່ພວກເຈົ້າ.[27]ເຮົາຈະໃສ່ຈິດວິນຍານຂອງເຮົາໄວ້ພາຍໃນພວກເຈົ້າ,
ແລ້ວເຮັດໃຫ້ພວກເຈົ້າສາມາດດຳເນີນຕາມກົດບັນຍັດຂອງເຮົາ ແລະຮັກສາກົດຫມາຍຂອງເຮົາ, ເພື່ອພວກເຈົ້າຈະເຮັດຕາມສິ່ງເຫລົ່ານັ້ນ.
[28]ແລ້ວພວກເຈົ້າຈະອາໄສຢູ່ໃນແຜ່ນດິນທີ່ເຮົາໄດ້ມອບໃຫ້ແກ່ບັນພະບູລຸດຂອງພວກເຈົ້າ; ພວກເຈົ້າຈະເປັນປະຊາຊົນຂອງເຮົາ, ແລະ ເຮົາຈະ
ເປັນພຣະເຈົ້າຂອງພວກເຈົ້າ.


generated on Tue Jun 17 19:01:42 2025

[29]ເພື່ອເຮົາຈະຊ່ວຍພວກເຈົ້າໃຫ້ພົ້ນຈາກສິ່ງທີ່ບໍ່ສະອາດທັງຫລາຍຂອງພວກເຈົ້າ. ເຮົາຈະຮວບຮວມເມັດພືດ ແລະ ຂະຫຍາຍມັນ. ເຮົາຈະບໍ່-
ໃຫ້ໄພອຶດຫິວມາເຫນືອພວກເຈົ້າອີກຕໍ່ໄປ.[30]ເຮົາຈະເພີ່ມພູນຜົນລະປູກຂອງຕົ້ນໄມ້ທັງຫລາຍ ແລະ ຜົນຜະລິດຈາກທົ່ງນາຂອງເຈົ້າ ເພື່ອພວກ
ເຈົ້າຈະບໍ່ຕ້ອງທົນຮັບຄວາມອັບອາຍທ່າມກາງປະຊາຊາດທັງຫລາຍ ເພາະໄພອຶດຫິວອີກຕໍ່ໄປ.[31]ແລ້ວພວກເຈົ້າຈະຮູ້-
ເຖິງວິຖີທາງຊົ່ວຂອງພວກເຈົ້າ ແລະ ການປະພຶດທີ່ບໍ່ດີທັງຫລາຍຂອງພວກເຈົ້າ, ແລະ ເຈົ້າຈະສະແດງການລັງກຽດຕົນເອງ ຍ້ອນຄວາມບາບ
ແລະ ສິ່ງທີ່ຫນ້າກຽດຫນ້າຊັງທັງຫລາຍຂອງຕົນ.
[32]ທີ່ເຮົາເຮັດເຊັ່ນນີ້, ບໍ່ແມ່ນເພາະເຫັນແກ່ພວກເຈົ້າ — ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ —
ໃຫ້ສິ່ງເຫລົ່ານີ້ເປັນທີ່ຮັບຮູ້ແກ່ເຈົ້າ. ຈົ່ງອັບອາຍ ແລະຂາຍຫນ້າດ້ວຍວິທີທາງທັງຫລາຍຂອງພວກເຈົ້າ.[33]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວ
ດັ່ງນີ້ວ່າ: ໃນວັນທີ່ເຮົາຊໍາລະພວກເຈົ້າຈາກຄວາມຜິດບາບທັງຫມົດຂອງພວກເຈົ້ານັ້ນ, ເຮົາຈະເຮັດໃຫ້ເມືອງທັງຫລາຍມີຄົນອາໄສຢູ່ ແລະ
ຊາກຫັກພັງຈະຖືກສ້າງຂຶ້ນ.[34]ເພາະພວກເຈົ້າຈະໄຖແຜ່ນດິນທີ່ຮົກຮ້າງ
ຈົນກວ່າຈະບໍ່ເປັນທີ່ຮ້າງເປົ່າເຊັ່ນທີ່ເຄີຍປາກົດແກ່ສາຍຕາຍຂອງຜູ້ຜ່ານໄປມາ.
[35]ແລ້ວຄົນທັງຫລາຍຈະເວົ້າວ່າ, "ແຜ່ນດິນນີ້ເຄີຍຮົກຮ້າງ, ບັດນີ້ໄດ້ກາຍເປັນເຫມືອນສວນເອເດນ; ເມືອງທັງຫລາຍທີ່ຮົກຮ້າງ ແລະ
ບໍ່ມີຄົນຢູ່ອາໄສໄດ້ຖືກເພພັງລົງ ປັດຈຸບັນມີປ້ອມປາການ ແລະ ມີຄົນອາໄສຢູ່."[36]ແລ້ວບັນດາຊົນຊາດທີ່ເຫລືອ ຊຶ່ງຢູ່ອ້ອມຮອບເຈົ້າຈະຮູ້ວ່າ ເຮົາ
ແມ່ນພຣະຢາເວ, ເປັນຜູ້ສ້າງສະຖານທີ່ເພພັງເຫລົ່ານີ້ຂຶ້ນໃຫມ່ ແລະ ປູກພືດໃນບ່ອນຮົກຮ້າງເຫລົ່ານີ້. ເຮົາແມ່ນພຣະຢາເວ, ໄດ້ລັ່ນວາຈາແລ້ວ
ແລະ ເຮົາຈະເຮັດເຊັ່ນນັ້ນ.
[37]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ອີກຄັ້ງຫນຶ່ງ ເຮົາຈະຖືກປະຊາຊົນອິດສະຣາເອນ ຂໍໃຫ້ເຮົາເຮັດສິ່ງນີ້ແກ່ພວກເຂົາ,
ເພື່ອເຮັດໃຫ້ພວກເຂົາເພີ່ມຈໍານວນຂຶ້ນເຫມືອນຝູງຊົນເຫລົ່ານັ້ນ.[38]ຢ່າງຝູງແກະສໍາລັບເຜົາບູຊາຖວາຍບູຊາ, ຢ່າງຝູງແກະໃນນະຄອນເຢຣູຊາ-
ເລັມທີ່ມີງານເທດສະການທີ່ກໍານົດ, ເພື່ອເມືອງທັງຫລາຍທີ່ຮົກຮ້າງເຫລົ່ານີ້ ກໍຈະເຕັມດ້ວຍຝູງຊົນ ແລະພວກເຂົາທັງຫລາຍຈະຮູ້ວ່າ ເຮົາ ຄື
ພຣະຢາເວ.'"

37 1ພຣະຫັດຂອງພຣະຢາເວໄດ້ມາຢູ່ເຫນືອຂ້ານ້ອຍ, ແລະພຣະອົງໄດ້ຊົງນຳຂ້ານ້ອຍອອກມາດ້ວຍພຣະວິນຍານບໍຣິສຸດຂອງພຣະຢາເວ
ແລະ ຊົງຕັ້ງຂ້ານ້ອຍໄວ້ໃນທ່າມກາງຮ່ອມພູແຫ່ງຫນຶ່ງ; ຊຶ່ງມີກະດູກເຕັມໄປຫມົດ.2ແລ້ວພຣະອົງໄດ້ຊົງນຳພາຂ້ານ້ອຍໄປທົ່ວບໍລິເວນນັ້ນ
ແລະ ອ້ອມຮອບບ່ອນນັ້ນ. ເບິ່ງແມ໋! ມີກະດູກຢ່າງຫລວງຫລາຍໃນຮ່ອມພູ. ເບິ່ງແມ໋! ພວກມັນແຫ້ງທັງຫມົດ.3ພຣະອົງກ່າວກັບຂ້ານ້ອຍວ່າ,
“ບຸດແຫ່ງມະນຸດເອີຍ, ກະດູກເຫລົ່ານີ້ຈະມີຊີວິດຄືນອີກໄດ້ບໍ?” ດັ່ງນັ້ນຂ້ານ້ອຍ ທູນຕອບວ່າ, “ຂ້າແດ່ພຣະຢາເວອົງພຣະຜູ້ເປັນເຈົ້າ, ພຣະອົງ
ເທົ່ານັ້ນທີ່ຊົງຮູ້ດີ.”

4ແລ້ວພຣະອົງຊົງກ່າວກັບຂ້ານ້ອຍວ່າ, “ຈົ່ງກ່າວຄຳທຳນວາຍຕໍ່ກະດູກຫລ້ອນເຫລົ່ານີ້ ແລະ ກ່າວກັບພວກມັນວ່າ, 'ກະດູກແຫ້ງເອີຍ. ຈົ່ງຟັງ
ພຣະຄຳຂອງພຣະຢາເວ.5ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວແກ່ກະດູກເຫລົ່າດັ່ງນີ້ວ່າ: ເບິ່ງແມ໋! ເຮົາກຳລັງຈະລະບາຍລົມຫາຍໃຈເຂົ້າໄປ
ໃນພວກເຈົ້າ, ແລະ ພວກເຈົ້າຈະມີຊີວິດ.6ເຮົາຈະໃສ່ເສັ້ນເອນໄວ້ເທິງພວກເຈົ້າ ແລະ ຈະເຮັດໃຫ້ເນື້ອຫນັງມາເທິງພວກເຈົ້າ.
ເຮົາຈະປົກຄຸມເຈົ້າດ້ວຍເນື້ອ ແລະ ບັນຈຸລົມຫາຍໃຈໃນພວກເຈົ້າເພື່ອພວກເຈົ້າຈະມີຊີວິດຢູ່. ແລ້ວພວກເຈົ້າຈະຮູ້ວ່າ ເຮົາ ຄືພຣະຢາເວ.'"
7ດັ່ງນັ້ນ ຂ້ານ້ອຍ ຈຶ່ງທຳນວາຍເຫມືອນຢ່າງທີ່ໄດ້ຮັບຄຳສັ່ງມາ; ຢ່າງທີ່ໄດ້ທຳນວາຍ, ເບິ່ງແມ໋, ມີສຽງດັງມາ, ທີ່ເປັນສຽງສະທ້ານຫວັ່ນໄຫວ.
ແລ້ວພວກກະດູກທັງຫລາຍກໍເຂົ້າຫາກັນ — ກະດູກກັບກະດູກ.8ຂ້ານ້ອຍໄດ້ເບິ່ງ ແລະ ເບິ່ງແມ໋, ເສັ້ນເອນຢູ່ເທິງພວກເຂົາ, ແລະ ກ້າມເນື້ອໄດ້
ຕິດກັບກະດູກ ແລະ ຫນັງທັງຫລາຍປົກຫຸ້ມພວກມັນໄວ້. ແຕ່ບໍ່ທັນມີລົມຫາຍໃຈໃນພວກມັນ.
9ແລ້ວພຣະຢາເວຊົງກ່າວຕໍ່ຂ້ານ້ອຍກ່າວວ່າ, “ຈົ່ງກ່າວຄຳທຳນວາຍແກ່ລົມຫາຍໃຈ, ບຸດແຫ່ງມະນຸດເອີຍ, ແລະຈົ່ງກ່າວກັບລົມຫາຍໃຈວ່າ,
'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ລົມຫາຍໃຈເອີຍ, ຈົ່ງມາຈາກລົມທັງສີ່ທິດ, ແລະ
ລະບາຍລົມຫາຍໃຈລົງເທິງຄົນທີ່ຖືກຂ້າພວກນີ້, ເພື່ອພວກເຂົາຈະມີຊີວິດຢູ່.”10ດັ່ງນັ້ນ ຂ້ານ້ອຍຈຶ່ງກ່າວຄຳທຳນວາຍຕາມທີ່ພຣະອົງຊົງ
ສັ່ງຂ້ານ້ອຍ; ລົມຫາຍໃຈເຂົ້າມາໃນພວກເຂົາ ແລະ ພວກເຂົາກໍມີຊີວິດອີກ. ພວກເຂົາກໍຢືນຂຶ້ນດ້ວຍຕີນຂອງພວກເຂົາ;
ຊຶ່ງເປັນກອງທັບທີ່ຍິ່ງໃຫຍ່.
11ແລ້ວພຣະຢາເວໄດ້ຊົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ກະດູກເຫລົ່ານີ້ ຄືປະຊາຊົນອິດສະຣາເອນທັງຫມົດ. ເບິ່ງແມ໋!
ພວກເຂົາກ່າວວ່າ, 'ກະດູກຂອງພວກເຮົາແຫ້ງ, ແລະ ຄວາມຫວັງຂອງພວກເຮົາກໍຫມົດສິ້ນ. ພວກເຮົາໄດ້ຖືກທຳລາຍເສຍຫມົດ.12ເພາະສະນັ້ນ
ຈົ່ງກ່າວຄຳທຳນວາຍ ແລະ ກ່າວແກ່ພວກເຂົາວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະໄຂຂຸມຝັງສົບຂອງພວກ-
ເຂົາອອກມາຈາກຂຸມຝັງສົບຂອງພວກເຈົ້າ ແລະ ຍົກພວກເຂົາຂຶ້ນຈາກຂຸມເຫລົ່ານັ້ນ, ໄພພົນຂອງເຮົາເອີຍ. ເຮົາຈະນຳເຈົ້າກັບມາຍັງແຜ່ນດິນ
ອິດສະຣາເອນ.
13ແລ້ວພວກເຈົ້າທັງຫລາຍຈະຮູ້ວ່າ ເຮົາຄືພຣະຢາເວ, ເມື່ອໄຂຂຸມຝັງສົບຂອງພວກເຈົ້າ ແລະ ນຳພວກເຈົ້າອອກມາຈາກຂຸມຝັງສົບນັ້ນ.14ເຮົາ
ຈະໃສ່ວິນຍານຂອງເຮົາໄວ້ໃນພວກເຈົ້າ ເພື່ອພວກເຈົ້າຈະມີຊີວິດຢູ່, ແລະ ເຮົາຈະໃຫ້ພວກເຂົາພັກຜ່ອນໃນແຜ່ນດິນຂອງພວກເຈົ້າ ເມື່ອພວກເຂົາ
ຈະຮູ້ວ່າ ເຮົາຄືພຣະຢາເວ. ໄດ້ລັ່ນວາຈາແລ້ວ ແລະ ເຮົາຈະລົງມືເຮັດ — ນີ້ເປັນຄຳປະກາດຂອງພຣະຢາເວ.'"
15ແລ້ວພຣະຄຳຂອງພຣະຢາເວຊົງກ່າວຂ້ານ້ອຍ, ກ່າວວ່າ,16“ບັດນີ້, ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງເອົາໄມ້ທ່ອນຫນຶ່ງສຳລັບຕົນ ແລະ ຂຽນລົງໃສ່
ວ່າ, 'ສຳລັບຢູດາ ແລະ ສຳລັບປະຊາຊາຊົນອິດສະຣາເອນ, ຊຶ່ງເປັນສະຫາຍຂອງພວກເຂົາ.' ແລ້ວຈົ່ງເອົາໄມ້ມາອີກທ່ອນຫນຶ່ງ ແລະ
ຂຽນລົງໃສ່ວ່າ, 'ສຳລັບໂຢເຊບ, ກິ່ງກ້ານຂອງເອຟຣາອິມ, ແລະ ສຳລັບ ປະຊາຊົນອິດສະຣາເອນທັງຫມົດ,
ຊຶ່ງເປັນສະຫາຍຂອງພວກເຂົາ'17ຈົ່ງນຳໄມ້ທັງສອງທ່ອນລວມເຂົ້າເປັນອັນດຽວ, ເພື່ອວ່າໄມ້ທັງສອງກາຍເປັນໄມ້ອັນດຽວໃນມືຂອງເຈົ້າ.
18ເມື່ອຊົນຊາດຂອງເຈົ້າກ່າວກັບເຈົ້າວ່າ, 'ທ່ານຈະບອກໃຫ້ພວກເຮົາຮູ້ຫລືວ່າ ສິ່ງເຫລົ່ານີ້ມີຄວາມຫມາຍ
ວ່າແນວໃດ?'19ແລ້ວຈົ່ງກ່າວກັບພວກເຂົາວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາກຳລັງຈະເອົາກິ່ງກ້ານຂອງໂຢເຊບ
ຊຶ່ຢູ່ໃນມືຂອງເອຟຣາຢິມ ແລະ ຂອງເຜົ່າຕ່າງໆຂອງອິດສະຣາເອນ ຊຶ່ງເປັນສະຫາຍຂອງພວກເຂົາ ແລະ ເຮົາຈະເອົາມາລວມກັບເຜົ່າຢູດາ,
ເພື່ອພວກເຂົາຈະເຮັດໃຫ້ເປັນກິ່ງກ້ານອັນດຽວກັນ, ແລະ ພວກເຂົາຈະກາຍເປັນອັນດຽວກັນໃນມືຂອງເຮົາ'20ຈົ່ງຖືກິ່ງໄມ້
ຊຶ່ງເຈົ້າໄດ້ຂຽນໄວ້ໃນມືຂອງເຈົ້າຕໍ່ຫນ້າຕໍ່ຕາພວກເຂົາ.
21ຈົ່ງປະກາດກັບພວກເຂົາວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເບິ່ງແມ໋! ເຮົາຈະນຳເອົາຄົນອິດສະຣາເອນອອກ-
ຈາກທ່າມກາງບັນດາຊົນຊາດທີ່ພວກເຂົາໄດ້ອາໄສຢູ່. ແລະຈະເຕົ້າໂຮມພວກເຂົາຈາກແຜ່ນດິນຮອບຂ້າງ ແລະ ຈະນຳພວກເຂົາມາຍັງແຜ່ນດິນ
ຂອງພວກເຂົາ.22ເຮົາຈະເຮັດໃຫ້ພວກເຂົາເປັນຊົນຊາດດຽວໃນແຜ່ນດິນນັ້ນ, ຢູ່ໃນພູທັງຫລາຍຂອງອິດສະຣາເອນ, ແລະ ໃນບ່ອນນັ້ນຈະມີກະ-
ສັດອົງດຽວເປັນກະສັດເຫນືອພວກເຂົາທັງຫມົດ, ແລະ ພວກເຂົາຈະບໍ່ຖືກແບ່ງແຍກອອກເປັນສອງອານາຈັກອີກຕໍ່ໄປ.23ແລ້ວພວກເຂົາຈະ
ບໍ່ເຮັດຕົວຂອງພວກເຂົາໃຫ້ເປັນມົນທິນດ້ວຍຮູບເຄົາລົບທັງຫລາຍ, ການກະທຳອັນຫນ້າກຽດຫນ້າຊັງທັງຫລາຍ,
ຄວາມບາບທັງຫລາຍຂອງພວກເຂົາ. ເພື່ອເຮົາຈະຊ່ວຍພວກເຂົາໃຫ້ພົ້ນຈາກການກະທຳທີ່ບໍ່ສັດຊື່ຂອງພວກເຂົາ ຊຶ່ງເປັນເຫດເຮັດບາບ, ແລະ
ເຮົາຈະຊຳລະພວກເຂົາ, ເພື່ອພວກເຂົາຈະເປັນປະຊາຊົນຂອງເຮົາ ແລະ ເຮົາຈະເປັນພຣະເຈົ້າຂອງພວກເຂົາ.
24ດາວິດຜູ້ຮັບໃຊ້ຂອງເຮົາຈະເປັນກະສັດເຫນືອພວກເຂົາ. ດັ່ງນັ້ນ ພວກເຂົາທັງຫມົດຈະມີຜູ້ລ້ຽງຜູ້ດຽວກັນ, ແລະ ພວກເຂົາ
ຈະດຳເນີນຕາມກົດຫມາຍຂອງເຮົາ ແລະ ຮັກສາກົດເກນຂອງເຮົາ ແລະ ເຊື່ອຟັງ.25ພວກເຂົາຈະອາໄສຢູ່ໃນແຜ່ນດິນທີ່ເຮົາ ໄດ້ມອບໃຫ້ຢາ-
ໂຄບຜູ້ຮັບໃຊ້ຂອງເຮົາ, ຊຶ່ງເປັນບ່ອນທີ່ບັນພະບູລຸດຂອງພວກເຈົ້າໄດ້ອາໄສຢູ່ນັ້ນ. ພວກເຂົາຈະຢູ່ທີ່ນັ້ນຕະຫລອດໄປເປັນນິດ — ພວກເຂົາ, ພ້ອມ
ທັງລູກຫລານຂອງພວກເຂົາ, ແລະ ເພາະດາວິດຜູ້ຮັບໃຊ້ຂອງເຮົາ ກໍຈະປົກຄອງພວກເຂົາເປັນນິດ.
26ເຮົາຈະໃຫ້ຄຳຫມັ້ນສັນຍາແຫ່ງສັນຕິສຸກກັບພວກເຂົາ. ມັນຈະເປັນສັນຍານິລັນດອນແກ່ພວກເຂົາ. ເຮົາຈະກໍ່ຕັ້ງພວກເຂົາ ແລະ
ທະວີຄູນພວກເຂົາຂຶ້ນ ແລະ ຕັ້ງສະຖານນະມັດສະການຂອງເຮົາໄວ້ທ່າມກາງພວກເຂົາເປັນນິດ.27ບ່ອນຢູ່ຂອງເຮົາຈະຢູ່ທ່າມກາງພວກເຂົາ;
ເຮົາຈະເປັນພຣະເຈົ້າຂອງພວກເຂົາ, ແລະ ພວກເຂົາກໍຈະເປັນປະຊາຊົນຂອງເຮົາ.28ແລ້ວປະຊາຊາດທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຢາເວ
ຜູ້ຊຶ່ງໄດ້ແຍກອິດສະຣາເອນອອກ, ເມື່ອສະຖານນະມັດສະການບໍຣິສຸດຂອງເຮົາຢູ່ທ່າມກາງພວກເຂົາເປັນນິດ.'"

 generated on Tue Jun 17 19:01:42 2025

38 1ພຣະຄຳຂອງພຣະຢາເວມາເຖິງຂ້ານ້ອຍ, ກ່າວວ່າ,2"ບຸດແຫ່ງມະນຸດເອີຍ, ຈົ່ງຕັ້ງຫນ້າຂອງເຈົ້າໄປຍັງໂກກ, ຄືແຜ່ນດິນແຫ່ງມາໂກກ,
ຜູ້ນຳສຳຄັນທີ່ສຸດຂອງເມເຊັກ ແລະ ຕູບານ; ແລະ ຈົ່ງກ່າວຄຳທຳນວາຍຕໍ່ສູ້ພວກເຂົາ.3ຈົ່ງກ່າວວ່າ, 'ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວ
ດັ່ງນີ້ວ່າ: ເບິ່ງແມ໋! ໂອ ໂກກເອີຍ, ເຮົາເປັນສັດຕູກັບເຈົ້າ, ຜູ້ເປັນຜູ້ນຳທີ່ສຳຄັນແຫ່ງເມເຊັກ ແລະ ຕູບານ.

4ດັ່ງນັ້ນ ເຮົາຈະໃຫ້ເຈົ້າຖອຍຫລັງກັບ ແລະ ເອົາເບັດເກາະຄາງກະໄຕຂອງເຈົ້າ; ແລະ ເຮົາຈະນຳເຈົ້າອອກມາພ້ອມທັງກອງທັບທັງຫມົດຂອງ
ເຈົ້າ, ທັງພວກມ້າ, ແລະ ບັນດາທະຫານມ້າ, ທຸກຄົນນຸ່ງຊຸດເກາະ, ເປັນກອງທັບໃຫຍ່ທີ່ຖືໂລ່ທັງຂະຫນາດໃຫ່ຍ ແລະ ຂະຫນາດນ້ອຍ,
ທຸກຄົນຖືດາບທັງຫລາຍ!5ຄົນເປີເຊຍ, ກູເຊ, ແລະ ຄົນລີເບຍ ຢູ່ກັບພວກເຂົາດ້ວຍ, ທຸກຄົນມີໂລ່ ແລະ ຫມວກເຫລັກ!6ໂກເມ ແລະ ກອງທັບທັງ
ຫມົດຂອງພວກເຂົາ, ແລະ ເບັດ ໂຕກາມາ, ຈາກທາງເຫນືອສຸດ, ພ້ອມກັບກອງທັບທັງຫມົດຂອງພວກເຂົາ! ມີຊົນຊາດທັງຫລາຍຢູ່ກັບເຈົ້າ!
7ຈົ່ງກຽມພ້ອມ! ແນ່ນອນ, ຈົ່ງໃຫ້ໂຕຂອງເຈົ້າ ແລະ ບັນດາກອງທັບທັງຫມົດຊຶ່ງປະຊຸມຢູ່ກັບເຈົ້າ, ແລະ ຈົ່ງເປັນຜູ້ບັນຊາການຂອງພວກເຂົາ.
8ເຈົ້າຈະຕ້ອງຖືກເອີ້ນໂຕອອກໄປສູ້ຮົບເປັນເວລາຫລາຍວັນ, ແລະ ໃນອີກຫລາຍປີຕໍ່ໄປໃນອະນາຄົດເຈົ້າຈະເຂົ້າໄປໃນແຜ່ນດິນຊຶ່ງ
ໄດ້ຕໍ່ສູ້ມາດ້ວຍດາບ ແລະ ຖືກຮວບຮວມຈາກຄົນທັງຫລາຍ, ເຕົ້າໂຮມກັນຢູ່ທີ່ເທິງພູແຫ່ງອິດສະຣາເອນ ຊຶ່ງເຄີຍເປັນບ່ອນຮ້າງເປົ່າ
ມາຕະຫລອດ. ແຕ່ແຜ່ນດິນຂອງປະຊາຊົນຈະຖືກນຳອອກມາຈາກຊົນຊາດອື່ນໆ, ແລະ ພວກເຂົາທັງຫມົດຈະອາໄສຢູ່ຢ່າງປອດໄພ!9ດັ່ງນັ້ນ
ພວກເຈົ້າຈະລຸກອອກໄປເຫມືອນພາຍຸ; ເຈົ້າຈະເປັນເຫມືອນເມກປົກຄຸມແຜ່ນດິນ, ຄືເຈົ້າ ແລະ ກອງທັບທັງຫມົດຂອງເຈົ້າ,
ລວມທັງພວກທະຫານຈຳນວນຫລາຍທີ່ຢູ່ກັບພວກເຈົ້າ.
10ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ສິ່ງນີ້ຈະເກີດຂຶ້ນໃນວັນນັ້ນ ຄືເປັນແຜນການທີ່ຈະເກີດຂຶ້ນໃນໃຈຂອງເຈົ້າ, ແລະ
ເຈົ້າຈະຄິດແຜນການຊົ່ວ.'11ແລ້ວເຈົ້າຈະກ່າວວ່າ, ‘ເຮົາຈະຍົກກອງທັບໄປຍັງແຜ່ນດິນທີ່ເປີດ; ເຮົາຈະໄປຫາຄົນທີ່ຫງຽບທີ່ອາໄສຢູ່ຢ່າງປອດໄພ,
ພວກເຂົາທັງຫມົດອາໄສຢູ່ໂດຍບໍ່ມີກຳແພງ ຫລື ບໍ່ມີສິ່ງກີດຂວາງ, ແລະ ບ່ອນທີ່ຊຶ່ງບໍ່ມີປະຕູເມືອງ.12ເຮົາຈະຍຶດເອົາເຄື່ອງຂອງທີ່ປຸ້ນມາ ແລະ
ປຸ້ນສະດົມ, ເພື່ອເອົາມືຂອງເຮົາຕໍ່ສູ້ດິນແດນທີ່ຮົກຮ້າງວ່າງເປົ່າ, ຊຶ່ງຂະນະນີ້ມີຄົນອາໄສຢູ່, ແລະ ຕໍ່ສູ້ກັບປະຊາຊົນທີ່ເຕົ້າໂຮມຈາກບັນດາປະ-
ຊາຊາດທັງຫລາຍ, ຝູງຊົນຜູ້ຊຶ່ງໄດ້ຝູງສັດ ແລະ ຊັບສິນບັດ, ແລະ ຄົນທັງຫາຍທີ່ອາໄສຢູ່ທ່າມກາງຂອງແຜ່ນດິນໂລກ.'
13ເຊບາ ແລະ ເດດານ, ແລະ ບັນດາພໍ່ຄ້າແຫ່ງທາຊິດ ລວມເຖິງພວກນັກຮົບຫນຸ່ມທັງຫລາຍຈະກ່າວແກ່ເຈົ້າວ່າ, ‘ທ່ານມາປຸ້ນ ແລະ ຍາດຊິງ
ເອົາເຄື່ອງຂອງບໍ? ທ່ານຮວບຮວມກອງທັບເພື່ອຈະຂົນສິ່ງຂອງ, ເອົາເງິນ ແລະ ຄຳໄປ, ຂົນເອົາທັງຝູງສັດ ແລະ ຊັບສິນບັດໄປ ແລະ ເພື່ອຈະ
ຍາດຊິງຂອງຢ່າງຫລວງຫລາຍບໍ?'
14ເພາະສະນັ້ນ ຈົ່ງກ່າວຄຳທຳນວາຍ, ບຸດແຫ່ງມະນຸດເອີຍ, ແລະ ກ່າວກັບໂກກວ່າ, ' ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ໃນມື້ນັ້ນ,
ເມື່ອປະຊາຊົນອິດສະຣາເອນຂອງເຮົາອາໄສຢູ່ຢ່າງປອດໄພແລ້ວ, ເຈົ້າຈະບໍ່ຮູ້ຈັກກ່ຽວກັບພວກເຂົາບໍ?15ເຈົ້າຈະມາຈາກບ່ອນຂອງເຈົ້າຊຶ່ງຢູ່ທາງ
ເຫນືອສຸດ ດ້ວຍກອງທັບໃຫຍ່, ຊຶ່ງທຸກຄົນໄດ້ຂີ່ມ້າ, ເປັນກອງກຳລັງຊຶ່ງພະລັງຫລາຍ, ເປັນກອງທັບຫລວງ.16ເຈົ້າຈະມາຕໍ່ສູ້ໄພ່ພົນ
ອິດສະຣາເອນຂອງເຮົາ ເຫມືອນຢ່າງເມກປົກຄຸມແຜ່ນດິນ. ໃນມື້ນັ້ນ ເຮົາຈະນຳເຈົ້າມາຕໍ່ສູ້ກັບແຜ່ນດິນຂອງເຮົາ, ເພື່ອປະຊາຊາດທັງຫລາຍ
ຈະຮູ້ຈັກເຮົາ ເມື່ອເຮົາສຳແດງໂຕຂອງເຮົາຜ່ານເຈົ້າ. ໂອ ໂກກ ເອີຍ, ເພື່ອຈະເປັນທີ່ບໍຣິສຸດຕໍ່ຫນ້າພວກເຂົາ.
17ພຣະຢາເວອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ເຈົ້າບໍ່ແມ່ນຜູ້ນັ້ນບໍ ຄືຜູ້ທີ່ເຮົາໄດ້ເວົ້າເຖິງສະໄຫມກ່ອນຜ່ານມືຜູ້ຮັບໃຊ້ຂອງເຮົາ, ຄືຜູ້ປະກາດ-
ພຣະຄຳຂອງອິດສະຣາເອນ, ຜູ້ໄດ້ປະກາດຄຳທຳນວາຍໃນເວລານັ້ນຢູ່ຫລາຍປີແລ້ວວ່າ ເຮົາຈະນຳເຈົ້າມາຕໍ່ສູ້ກັບພວກເຂົາ?18ດັ່ງນັ້ນ
ສິ່ງນີ້ໄດ້ເກີດຂຶ້ນໃນວັນນັ້ນ ເມື່ອໂກກຍົກທັບມາຕໍ່ສູ້ກັບແຜ່ນດິນອິດສະຣາເອນ — ຄວາມພິໂລດຂອງເຮົາຈະພຸ່ງຂຶ້ນ —
ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.
19ດ້ວຍຄວາມຮູ້ສຶກອັນແຮງກ້າ ແລະ ດ້ວຍໄຟແຫ່ງຄວາມພິໂລດຂອງເຮົາ, ເຮົາປະກາດວ່າ ໃນມື້ນັ້ນຈະມີແຜ່ນດິນໄຫວຢ່າງຮຸນແຮງໃນແຜ່ນ-
ດິນອິດສະຣາເອນ.20ພວກມັນສັ່ນສະເທືອນຕໍ່ຫນ້າເຮົາ — ທັງປາໃນທະເລ ແລະ ນົກໃນທ້ອງຟ້າ, ທັງສັດປ່າໃນທົ່ງ, ແລະ ບັນດາສັດເລືອຄານທີ່
ຢູ່ເທິງແຜ່ນດິນ, ແລະປະຊາຊົນແຕ່ລະຄົນທີ່ຢູ່ເທິງແຜ່ນດິນໂລກ. ພູເຂົາທັງຫລາຍຈະພັງທະລາຍລົງ ແລະ ຫນ້າຜາທັງຫລາຍຈະພັງທະລາຍລົງ,
ຈົນກວ່າກຳແພງທຸກແຫ່ງຈະເພພັງລົງເທິງພື້ນດິນ.
21ເຮົາຈະເອີ້ນດາບມາຕໍ່ສູ້ລາວເທິງພູເຂົາທັງຫລາຍຂອງເຮົາ ແລະ ດາບຂອງແຕ່ລະຄົນຈະຕໍ່ສູ້ກັບພີ່ນ້ອງຂອງພວກເຂົາເອງ —
ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.22ເຮົາຈະພິພາກສາລົງໂທດພວກເຂົາດ້ວຍພະຍາດລະບາດ ແລະເລືອດຕົກ; ແລະ ນ້ຳຝົນ
ໄຫລແຮງ ແລະ ມີທັງຫມາກເຫັບ ແລະ ລູກສອນໄຟ ເຮົາຈະຖອກເທໃສ່ພວກເຂົາ ແລະ ກອງທັບຂອງພວກເຂົາ ແລະ ຊົນຊາດທັງຫລາຍທີ່ຢູ່ກັບ
ເຂົາ.23ເພາະເຮົາຈະສະແດງຄວາມຍິ່ງໃຫຍ່ ແລະ ຄວາມບໍຣິສຸດຂອງເຮົາ ແລະ ເຮົາເຮັດໃຫ້ເຮົາເອງເປັນທີ່ຮູ້ຈັກໃນສາຍຕາຂອງປະຊາ-
ຊາດທັງຫລາຍ, ແລະ ພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວ.'"


generated on Tue Jun 17 19:01:42 2025

39 [1]“ບັດນີ້, ບຸດແຫ່ງມະນຸດເອີຍ, ຈົ່ງປະກາດຄຳທຳນວາຍຕໍ່ສູ້ໂກກ ແລະ ກ່າວວ່າ, 'ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ:
ເບິ່ງແມ້! ເຮົາເປັນສັດຕູກັບເຈົ້າ, ໂອ້ ໂກກເອີຍ, ຜູ້ເປັນຜູ້ນຳທີ່ສຳຄັນແຫ່ງເມເຊັກ ແລະ ຕູບານ.[2]ເຮົາຈະຫັນເຈົ້າກັບ ແລະ ນຳເຈົ້າ;
ເຮົາຈະນຳເຈົ້າມາຈາກທາງເຫນືອສຸດ ແລະ ນຳເຈົ້າມາເຖິງພູເຂົາທັງຫລາຍແຫ່ງອິດສະຣາເອນ.[3]ແລ້ວເຮົາຈະຕີຄັນທະນູໃຫ້ຫລຸດຈາກມືຊ້າຍ
ຂອງເຈົ້າ ແລະ ເຮັດໃຫ້ລູກທະນູຕົກຈາກມືຂວາຂອງເຈົ້າ.

[4]ເຈົ້າຈະລົ້ມລົງເທິງພູເຂົາທັງຫລາຍແຫ່ງອິດສະຣາເອນ — ທັງເຈົ້າ ແລະ ກອງທັບທັງຫມົດຂອງເຈົ້າ ແລະ ພວກທະຫານທັງຫລາຍທີ່ຢູ່ກັບເຈົ້າ.
ເຮົາຈະມອບເຈົ້າໃຫ້ເປັນອາຫານແກ່ນົກທຸກຊະນິດ ແລະ ແກ່ສັດປ່າແຫ່ງທ້ອງທົ່ງ.[5]ເຈົ້າຈະລົ້ມລົງເທິງພື້ນດິນໂລ່ງ, ເພາະເຮົາໄດ້ລັ່ນຄຳເວົ້າແລ້ວ
— ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.[6]ແລ້ວເຮົາຈະສົ່ງແປວໄຟມາເຫນືອມາໂກກ ແລະ
ເຫນືອພວກທີ່ອາໄສຢູ່ຢ່າງປອດໄພຕາມແຄມທະເລ, ແລະ ພວກເຂົາທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຢາເວ.
[7]ເພາະເຮົາຈະເຮັດໃຫ້ນາມບໍຣິສຸດຂອງເຮົາເປັນທີ່ຮູ້ຈັກໃນທ່າມກາງອິດສະຣາເອນປະຊາຊົນຂອງເຮົາ, ແລະ ເຮົາຈະບໍ່ຍອມໃຫ້ ນາມບໍຣິສຸດ
ຂອງເຮົາຖືກຫລົບລູ່ອີກຕໍ່ໄປ; ປະຊາຊາດທັງຫລາຍ ຈະຮູ້ວ່າ ເຮົາແມ່ນພຣະຢາເວ, ອົງບໍຣິສຸດໃນອິດສະຣາເອນ.[8]ເບິ່ງແມ້! ວັນ
ນັ້ນຈະມາເຖິງແລ້ວ, ແລະ ຈະເກີດຂຶ້ນແນ່ນອນ — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.
[9]ຜູ້ຄົນເຫລົ່ານັ້ນທີ່ອາໄສຢູ່ໃນບັນດາເມືອງຕ່າງໆຂອງອິດສະຣາເອນຈະອອກໄປ ແລະ ພວກເຂົາຈະໃຊ້ອາວຸດ ເພື່ອກໍ່ໄຟ ແລະ ເຜົາເຄື່ອງອາວຸດ
— ໂລ່ກຳບັງນ້ອຍ, ໂລ່ໃຫຍ່, ຄັນທະນູ, ລູກທະນູ, ໄມ້ຄ້ອນ ແລະ ຫອກຍາວ; ພວກເຂົາຈະເອົາພວກມັນເຜົາໄຟເປັນເວລາເຈັດປີ.[10]ພວກເຂົາບໍ່
ຈຳເປັນຈະຕ້ອງເອົາຟືນມາຈາກທົ່ງນາ ຫລື ຕັດຟືນມາຈາກປ່າ, ເພາະພວກເຂົາຈະກໍ່ໄຟດ້ວຍເຄື່ອງອາວຸດ; ພວກເຂົາທັງຫລາຍຈະຍາດຊິງເອົາ
ຈາກຜູ້ທີ່ຢາກຍາດຊິງຈາກພວກເຂົາ; ພວກເຂົາຈະປຸ້ນຜູ້ທີ່ຢາກຈະປຸ້ນພວກເຂົາ — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ."
[11]ແລ້ວສິ່ງເຫລົ່ານີ້ກໍຈະເກີດຂຶ້ນໃນມື້ທີ່ເຮົາຈະເຮັດບ່ອນຢູ່ໃນແກ່ໂກກ — ຄືມີຂຸມຝັງສົບຢູ່ໃນອິດສະຣາເອນ, ຮ່ອມພູສຳລັບຄົນທີ່ເດີນທາງຜ່ານ-
ໄປມາຈາກທິດຕາເວັນອອກຂອງທະເລ. ມັນຈະກີດຂວາງຄົນທີ່ຕ້ອງການຜ່ານໄປມາ. ເພາະວ່າໂກກ ແລະ ປະຊາຊົນທັງຫມົດຂອງລາວຈະຖືກ
ຝັງໄວ້ບ່ອນນັ້ນ. ພວກເຂົາຈະເອີ້ນທີ່ນັ້ນວ່າ ຮ່ອມພູແຫ່ງຮາໂມນໂກກ.
[12]ເຈັດເດືອນຕໍ່ມາ ເຊື້ອສາຍຂອງອິດສະຣາເອນຈະຝັງ ພວກເຂົາ ເພື່ອຈະເຮັດໃຫ້ແຜ່ນດິນນັ້ນສະອາດ.[13]ປະຊາຊົນທັງຫລາຍຂອງແຜ່ນດິນຈະ
ຝັງສົບຂອງພວກເຂົາ; ມື້ນີ້ຈະເປັນມື້ທີ່ທຸກຄົນຈື່ຈຳຄືເມື່ອເຮົາສະແດງສະຫງ່າຣາສີຂອງເຮົາ — ນີ້ເປັນຄຳປະກາດຂອງພຣະຢາເວ
ອົງພຣະຜູ້ເປັນເຈົ້າ."
[14]ແລ້ວພວກເຂົາທັງຫລາຍຈະຕັ້ງຄົນສຳຫລວດທົ່ວແຜ່ນດິນ, ເພື່ອຄົ້ນຫາຄົນເຫລົ່ານັ້ນທີ່ເດີນທາງຜ່ານໄປມາ, ແຕ່ສ່ວນຄົນທີ່ຕາຍແລ້ວ ແລະ
ຮ່າງຂອງພວກເຂົາຍັງເປັນສົບຢູ່ເທິງພື້ນແຜ່ນດິນນັ້ນ, ແລ້ວພວກເຂົາຈະຝັງສົບເຫລົ່ານັ້ນ, ເພື່ອຈະເຮັດໃຫ້ແຜ່ນດິນສະອາດ. ພວກເຂົາ
ຈະເລີ່ມຕົ້ນອອກສຳຫລວດຕັ້ງແຕ່ທ້າຍເດືອນທີເຈັດ.[15]ເມື່ອຄົນເຫລົ່ານັ້ນເດີນທາງຜ່ານໄປມາໃນແຜ່ນດິນ, ຖ້າພວກເຂົາເຫັນກະດູກຄົນ, ພວກ-
ເຂົາຈະເອົາເຄື່ອງຫມາຍປັກໄວ້ຂ້າງກະດູກນັ້ນ, ຈົນກວ່າຄົນຝັງຈະມາ ແລະ ຝັງກະດູກນັ້ນໄວ້ໃນຮ່ອມພູແຫ່ງຮາໂມນໂກກ.[16]ທີ່ນັ້ນຈະມີເມືອງ
ຫນຶ່ງຊື່ ຮາໂມນາ. ພວກເຂົາຈະເຮັດໃຫ້ແຜ່ນດິນສະອາດດ້ວຍວິທີເຊັ່ນນີ້ແຫລະ.
[17]ບັດນີ້, ບຸດແຫ່ງມະນຸດເອີຍ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຈົ່ງເວົ້າກັບນົກທີ່ມີປີກທຸກຊະນິດ ແລະ ເວົ້າກັບສັດປ່າ
ໃນທົ່ງທັງຫມົດວ່າ ‘ຈົ່ງຊຸມນຸມ ແລະ ມາເຖີດ. ຈົ່ງເຕົ້າໂຮມກັນຈາກທຸກດ້ານເພື່ອຖວາຍບູຊາທີ່ເຮົາກຽມໄວ້ເພື່ອເຈົ້າທັງຫລາຍ,
ເປັນການຖວາຍບູຊາຍິ່ງໃຫຍ່ເທິງພູເຂົາທັງຫລາຍແຫ່ງອິດສະຣາເອນ, ເພື່ອເຈົ້າຈະຮັບກິນຊີ້ນ ແລະ ດື່ມເລືອດ.[18]ພວກເຈົ້າຈະກິນຊີ້ນຂອງ
ພວກນັກຮົບ ແລະ ດື່ມເລືອດຂອງເຈົ້າຊາຍແຫ່ງແຜ່ນດິນ; ພວກເຂົາປຽບເຫມືອນແກະຜູ້, ລູກແກະ, ແບ້, ແລະ ງົວເຖິກ, ພວກມັນທັງຫມົດນີ້
ເປັນສັດອ້ວນພີແຫ່ງເມືອງບາຊານ.
[19]ແລ້ວພວກເຈົ້າຈະກິນໄຂມັນຈົນເຈົ້າອີ່ມຫນຳສຳລານ; ເຈົ້າຈະດື່ມເລືອດຈົນເຈົ້າເມົາ; ນີ້ເປັນການຖວາຍບູຊາທີ່ເຮົາກຽມໄວ້ໃຫ້ເຈົ້າ.[20]ເຈົ້າຈະ
ອີ່ມຫນຳສຳລານທີ່ໂຕະຂອງເຮົາດ້ວຍຊີ້ນມ້າ, ຊີ້ນຜູ້ຂີ່ມ້າ, ທັງຊີ້ນຂອງພວກນັກຮົບ, ແລະ ຂອງທຸກຄົນທີ່ເຮັດສົງຄາມ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.'
[21]ເຮົາຈະສະແດງພຣະສະຫງ່າຣາສີຂອງເຮົາທ່າມກາງປະຊາຊາດທັງຫລາຍທັງຫລາຍ, ແລະ ປະຊາຊາດທັງຫມົດຈະເຫັນການພິພາກສາລົງ-
ໂທດຂອງເຮົາ ຊຶ່ງເຮົາໄດ້ກະທຳ ແລະ ເຫັນມືຂອງເຮົາຊຶ່ງເຮົາຕໍ່ສູ້ພວກເຂົາ.[22]ຕັ້ງແຕ່ມື້ນັ້ນເປັນຕົ້ນໄປ ເຊື້ອສາຍອິດສະຣາເອນຈະຮູ້ວ່າ ເຮົາແມ່ນ
ພຣະຢາເວ ພຣະເຈົ້າຂອງພວກເຂົາ.
[23]ບັນດາປະຊາຊາດທັງຫລາຍຈະຮູ້ວ່າ ເຊື້ອສາຍອິດສະຣາເອນໄດ້ຖືກກວາດໄປເປັນຊະເລີຍ ເພາະຄວາມຜິດບາບຂອງພວກເຂົາ ໂດຍພວກເຂົາ
ໄດ້ທໍລະຍົດຕໍ່ເຮົາ, ດັ່ງນັ້ນ ເຮົາຈຶ່ງເຊື່ອງຫນ້າຂອງເຮົາຈາກພວກເຂົາ ແລະ ມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ ເພື່ອໃຫ້ພວກເຂົາລົ້ມລົງ
ດ້ວຍດາບ.[24]ເຮົາໄດ້ເຮັດກັບພວກເຂົາຕາມຄວາມເປິເປື້ອນຂອງພວກເຂົາ ແລະ ຄວາມຜິດບາບຂອງພວກເຂົາ, ເມື່ອເຮົາເຊື່ອງຫນ້າຂອງເຮົາ
ຈາກພວກເຂົາ.
[25]ເພາະສະນັ້ນ ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ບັດນີ້ ເຮົາຈະນຳການຄືນດີມາເຖິງຢາໂຄບ, ແລະ ເຮົາຈະມີຄວາມເມດຕາຕໍ່
ເຊື້ອສາຍອິດສະຣາເອນທັງຫມົດ, ເມື່ອເຮົາເຮັດດ້ວຍໃຈທີ່ຮ້ອນຮົນເພື່ອນາມບໍຣິສຸດຂອງເຮົາ.[26]ເມື່ອນັ້ນພວກເຂົາຈະທົນຮັບຄວາມອັບ-
ອາຍຂາຍຫນ້າຂອງພວກເຂົາ ແລະ ການທໍລະຍົດທັງສິ້ນ ຊຶ່ງພວກເຂົາໄດ້ທໍລະຍົດເຮົາ. ພວກເຂົາຈະລືມສິ່ງເຫລົ່ານີ້ທັງຫມົດ
ເມື່ອພວກເຂົາໄດ້ຢຸດພັກໃນແຜ່ນດິນໃນແຜ່ນດິນຂອງເຂົາຢ່າງປອດໄພ, ໂດຍບໍ່ມີຜູ້ໃດເຮັດໃຫ້ພວກເຂົາຢ້ານກົວ.[27]ເມື່ອເຮົາ
ນຳພວກເຂົາກັບມາສູ່ສະພາບເດີມຈາກຊົນຊາດທັງຫລາຍ ແລະ ເຕົ້າໂຮມພວກເຂົາຈາກແຜ່ນດິນສັດຕູຂອງພວກເຂົາ, ເຮົາຈະສຳແດງຄວາມບໍ-
ຣິສຸດຂອງເຮົາຕໍ່ຫນ້າຕໍ່ຕາປະຊາຊາດທັງຫລາຍ.
[28]ແລ້ວພວກເຂົາຈະຮູ້ວ່າ ເຮົາແມ່ນພຣະຢາເວພຣະເຈົ້າຂອງພວກເຂົາ, ເພາະເຮົາໄດ້ສົ່ງພວກເຂົາໄປເປັນຊະເລີຍຢູ່ທ່າມກາງບັນດາປະຊາ-
ຊາດທັງຫລາຍ, ແຕ່ເຮົາກໍຮວບຮວມພວກເຂົາກັບຄືນມາໃນແຜ່ນດິນຂອງພວກເຂົາ. ເຮົາຈະບໍ່ປ່ອຍໃຫ້ຄົນຫນຶ່ງຄົນໃດໃນພວກເຂົາເຫລືອຢູ່
ທ່າມກາງບັນດາປະຊາຊາດເຫລົ່ານັ້ນອີກເລີຍ.[29]ເຮົາຈະບໍ່ເຊື່ອງຫນ້າຂອງເຮົາໄວ້ຈາກພວກເຂົາອີກເລີຍ ເມື່ອເຮົາຖອກເທພຣະວິນຍານຂອງເຮົາ
ເຫນືອເຊື້ອສາຍອິດສະຣາເອນ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ."

40 1ໃນປີທີຊາວຫ້າທີ່ພວກເຮົາໄດ້ຖືກກວາດໄປເປັນຊະເລີຍນັ້ນ ໃນຕົ້ນປີຂອງວັນທີສິບຂອງເດືອນ, ຊຶ່ງເປັນປີທີສິບສີ່ ຫລັງຈາກ
ທີ່ເມືອງນັ້ນຖືກເຂົ້າຢຶດ — ໃນມື້ດຽວນັ້ນ, ພຣະຫັດຂອງພຣະຢາເວໄດ້ມາຢູ່ເໜືອຂ້ານ້ອຍ ແລະ ພຣະອົງໄດ້ຊົງນຳຂ້ານ້ອຍໄປທີ່ນັ້ນ. 2ໃນນິ-
ມິດທັງຫລາຍຈາກພຣະເຈົ້າ ພຣະອົງໄດ້ນຳຂ້ານ້ອຍມາເຖິງແຜ່ນດິນອິດສະຣາເອນ. ພຣະອົງໄດ້ໃຫ້ຂ້ານ້ອຍພັກຜ່ອນຢູ່ເທິງພູເຂົາສູງ; ຊຶ່ງ
ມີເຮືອນຕ່າງໆຂອງເມືອງຕັ້ງໄປທາງທິດໃຕ້.

3ເມື່ອພຣະອົງໄດ້ຊົງນຳຂ້ານ້ອຍໄປຍັງບ່ອນນັ້ນ. ເບິ່ງແມ໋, ມີຊາຍຄົນຫນຶ່ງມີລັກສະນະຄ້າຍຄືທອງເຫລືອງ. ມີເຊືອກປ່ານເສັ້ນຫນຶ່ງ ແລະ ໄມ້ວັດ-
ແທກອັນຫນຶ່ງຢູ່ໃນມືເຂົາ, ແລະ ເຂົາຢືນຢູ່ທີ່ປະຕູເມືອງ. 4ຊາຍຜູ້ນັ້ນໄດ້ກ່າວແກ່ຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ຈົ່ງເບິ່ງດ້ວຍຕາຂອງເຈົ້າ
ແລະ ຈົ່ງຟັງດ້ວຍຫູທັງສອງຂອງເຈົ້າເຖີດ, ແລະ ຈົ່ງເອົາໃຈໃສ່ທຸກສິ່ງທີ່ເຮົາຈະສຳແດງໃຫ້ແກ່ເຈົ້າ, ເພາະວ່າທີ່ເຮົານຳເຈົ້າມາບ່ອນນີ້ກໍເພື່ອຈະ
ສຳແດງສິ່ງເຫລົ່ານີ້ໃຫ້ແກ່ເຈົ້າ. ຈົ່ງລາຍງານທຸກສິ່ງທີ່ເຈົ້າເຫັນນັ້ນ ແກ່ເຊື້ອສາຍອິດສະຣາເອນ."
5ມີກຳແພງອ້ອມຮອບຢູ່ບໍລິເວນດ້ານນອກຂອງພຣະວິຫານ. ໄມ້ວັດແທກໃນມືຂອງຊາຍຜູ້ນັ້ນມີຄວາມຍາວຫົກສອກ, ແຕ່ລະສອກຍາວເທົ່າ
ກັບຫນຶ່ງສອກກັບຫນຶ່ງຝ່າມື. ລາວໄດ້ວັດແທກກຳແພງນັ້ນ; ມັນມີລວງຍາວເທົ່າກັບຫນຶ່ງໄມ້ວັດແທກ ແລະລວງສູງໄດ້ຫນຶ່ງໄມ້ວັດແທກ. 6ແລ້ວ
ຊາຍຄົນນັ້ນໄດ້ຫັນຫນ້າໄປທີ່ປະຕູເມືອງທາງທິດຕາເວັນອອກ. ເຂົາໄດ້ຂຶ້ນຕາມຂັ້ນໄດ ແລະ ໄດ້ວັດແທກທາງເຂົ້າປະຕູເລິກ — ເທົ່າກັບຫນຶ່ງໄມ້
ວັດແທກ. 7ສ່ວນຫ້ອງທັງຫລາຍຂອງຍາມ ມີຄວາມຍາວຫນຶ່ງໄມ້ວັດແທກ ແລະ ກວ້າງຫນຶ່ງໄມ້ວັດແທກ; ຝາທີ່ກັ້ນລະຫວ່າງສອງຫ້ອງຍາມ
ມີຄວາມຍາວຫນາຫ້າສອກ, ແລະ ທາງເຂົ້າປະຕູຂອງພຣະວິຫານທີ່ຢູ່ຖັດຈາກລະບຽງມີຄວາມເລິກເທົ່າຫນຶ່ງໄມ້ວັດແທກ.
8ເຂົາກໍວັດແທກລະບຽງຂອງປະຕູ; ມັນມີຄວາມຍາວຫນຶ່ງໄມ້ວັດແທກ. 9ເຂົາວັດແທກລະບຽງຂອງປະຕູ ມີຄວາມເລິກຫນຶ່ງໄມ້ວັດແທກ.
ບັນດາເສົາປະຕູມີຄວາມກວ້າງສອງສອກ. ປະຕູຂອງລະບຽງນີ້ປິ່ນຫນ້າໃສ່ພຣະວິຫານ. 10ແຕ່ລະດ້ານຂອງປະຕູທາງຕາເວັນອອກມີບັນດາຫ້ອງ
ຍາມຢູ່ສາມຫ້ອງ, ແລະ ແຕ່ລະຫອ້ງມີຂະຫນາດດຽວກັນ, ແລະ ບັນດາຝາທີ່ແຍກແຕ່ລະຫ້ອງກໍມີຂະຫນາດດຽວກັນ.
11ແລ້ວຊາຍຄົນນັ້ນ ກໍໄດ້ວັດແທກຄວາມກວ້າງຂອງທາງຍ່າງເຂົ້າປະຕູ — ໄດ້ສິບສອກ; ແລະ ເຂົາກໍໄດ້ວັດແທກຄວາມຍາວຂອງປະຕູທາງເຂົ້າ
— ໄດ້ສິບສາມສອກ. 12ເຂົາໄດ້ວັດແທກຝາ ຊຶ່ງເປັນເຂດກັ້ນດ້ານຫນ້າຂອງຫ້ອງຕ່າງໆ — ໄດ້ຄວາມສູງຫນຶ່ງສອກ.
ແຕ່ລະດ້ານຂອງຫ້ອງທັງຫລາຍວັດແທກໄດ້ຫົກສອກ. 13ແລ້ວເຂົາກໍໄດ້ວັດແທກທາງເຂົ້າປະຕູຈາກຫລັງຄາຂອງຝາຂອງຍາມຫ້ອງຫນຶ່ງ
ຖັດໄປອີກຫ້ອງຫນຶ່ງໄດ້ —ຊາວຫ້າສອກ, ຈາກປະຕູທຳອິດຂອງຫ້ອງ ທີ່ຫນຶ່ງເຖິງຫ້ອງທີສອງ.
14ແລ້ວເຂົາກໍໄດ້ວັດແທກຝາລະຫວ່າງຫອ້ງຍາມຕ່າງໆ — ໄດ້ຄວາມຍາວຫົກສິບສອກ; ເຂົາໄດ້ວັດແທກໄກໄປເຖິງປະຕູລະບຽງດ້ວຍ.
15ທາງເຂົ້າຈາກດ້ານຫນ້າຂອງປະຕູເຖິງສຸດປະຕູລະບຽງອີກດ້ານຫນຶ່ງໄດ້ຫ້າສິບສອກ. 16ບັນດາປ່ອງຢ້ຽມຕ່າງໆທີ່ປິດຕໍ່ຫນ້າຫ້ອງຍາມ ແລະ
ຕໍ່ຫນ້າບັນດາເສົາຂອງມັນ ຊຶ່ງຢູ່ພາຍໃນປະຕູອ້ອມຮອບ; ແລະ ເຊັ່ນດຽວກັບບໍລິເວນປະຕູຫນ້າ. ມີປະຕູປ່ອງຢ້ຽມຢູ່ຮອບດ້ານໃນ. ແລະ
ແຕ່ລະຫ້ອງມີການຕົບແຕ່ງດ້ວຍບັນດາຕົ້ນຝາມ.
17ແລ້ວຊາຍຄົນນັ້ນກໍນຳຂ້ານ້ອຍອອກໄປທີ່ເດີ່ນຊັ້ນນອກຂອງພຣະວິຍານ. ເບິ່ງແມ໋, ມີຫ້ອງຕ່າງໆ, ແລະ ມີທາງເດີນໃນຮອບເດີ່ນ, ມີຫ້ອງສາມ-
ສິບຫ້ອງຖັດຈາກທາງຍ່າງ. 18ມີທາງຍ່າງຂຶ້ນໄປຮອດປະຕູທາງຂ້າງ, ແລະ ຄວາມກວ້າງຂອງມັນເທົ່າກັບຄວາມຍາວຂອງປະຕູທັງຫລາຍ. ນີ້ເປັນ
ທາງຍ່າງຊັ້ນລຸ່ມ. 19ແລ້ວຊາຍຄົນນັ້ນກໍວັດແທກໄລຍະທາງຈາກທາງດ້ານຫນ້າຂອງປະຕູຊັ້ນລຸ່ມ ໄປຍັງສູ່ດ້ານຫນ້າຂອງປະຕູຊັ້ນໃນ;
ວັດແທກໄດ້ຫນຶ່ງຮ້ອຍສອກທາງທິດຕາເວັນອອກ, ແລະ ເຊັ່ນດຽວກັນກັບຈາກທາງທິດເຫນືອ.
20ແລ້ວເຂົາກໍໄດ້ວັດແທກຄວາມຍາວ ແລະ ຄວາມກວ້າງຂອງປະຕູທີ່ຢູ່ທາງທິດເຫນືອຂອງເດີ່ນຊັ້ນນອກ. 21ມີຫ້ອງຍາມ
ທີ່ຢູ່ສາມຫ້ອງຂອງແຕ່ລະປະຕູ, ແລະ ປະຕູ ແລະ ລະບຽງມີຂະຫນາດດຽວກັນປະຕູຫລັກ — ທັງຫມົດຍາວຫ້າສິບສອກ ແລະ ກວ້າງຊາວຫ້າ
ສອກ.
22ບັນດາປ້ອງຢ້ຽມ, ລະບຽງ, ຫ້ອງຍາມຕ່າງໆ, ແລະ ຕົ້ນປາມລຽນຕິດຕໍ່ກັນໄປຍັງປະຕູທີ່ປິ່ນຫນ້າໃສ່ທິດຕາມເວັນອອກ. ມີຂັ້ນໄດເຈັດຂັ້ນນຳ
ຂຶ້ນໄປເຖິງລະບຽງ. 23ມີປະຕູທີ່ໄປຍັງເດີ່ນຊັ້ນໃນ ຢູ່ເບື້ອງກົງກັນຂ້າມກັບປະຕູ ຊຶ່ງຢູ່ປິ່ນຫນ້າໄປທາງທິດເຫນືອ, ເຊັ່ນດຽວກັນກັບປະຕູທີ່ຢູ່ທາງຕາ-
ເວັນອອກດ້ວຍ; ຊາຍຄົນນັ້ນກໍໄດ້ວັດແທກໄລຍະຫ່າງຈາກປະຕູຫນຶ່ງໄປຍັງອີກປະຕູຫນຶ່ງ — ໄດ້ໄລຍະຫ່າງຫນຶ່ງຮ້ອຍສອກ.
24ຈາກນັ້ນ ຊາຍຄົນນັ້ນ ໄດ້ນຳຂ້ານ້ອຍ ໄປຍັງປະຕູທາງເຂົ້າທາງທິດໃຕ້, ແລະ ກຳແພງ ແລະ ລະບຽງກໍວັດແທກໄດ້
ເທົ່າກັບບັນດາປະຕູດ້ານນອກອື່ນໆ. 25ມີບັນດາປ່ອງຢ້ຽມທີ່ປິດທີ່ປະຕູ ແລະ ທີ່ລະບຽງເຫມືອນປະຕູນັ້ນ. ປະຕູທາງທິດໃຕ້
ແລະລະບຽງວັດແທກຄວາມຍາວໄດ້ຫ້າສິບສອກ ແລະ ຄວາມກວ້າງໄດ້ຊາວຫ້າສອກ.
26ມີຂັ້ນໄດເຈັດຂັ້ນນຳຂຶ້ນໄປເຖິງປະຕູ ແລະ ລະບຽງນັ້ນ, ແລະ ມີບັນດາຕົ້ນປາມແກະສະລັກຢູ່ທີ່ບັນດາກຳແພງດ້ານລະຕົ້ນ. 27ມີປະຕູຫນຶ່ງຢູ່ທາງ
ທິດໃຕ້ຂອງເດີ່ນຊັ້ນໃນ, ແລະ ຊາຍຄົນນັ້ນກໍວັດແທກໄລຍະຫ່າງຈາກປະຕູນັ້ນໄປຍັງອີກປະຕູທາງເຂົ້າຂອງທິດໃຕ້ — ໄລຍະຫ່າງຫນຶ່ງຮ້ອຍ
ສອກ.
28ແລ້ວຊາຍຄົນນັ້ນໄດ້ນຳຂ້ານ້ອຍມາຍັງເດີ່ນຊັ້ນໂດຍທາງປະຕູທິດໃຕ້, ຊຶ່ງເຂົາກໍໄດ້ວັດແທກເຫມືອນບັນດາປະຕູອື່ນໆ. 29ຫ້ອງຍາມ, ຝາຫ້ອງ
ແລະ ລະບຽງໄດ້ວັດແທກເຫມືອນປະຕູອື່ນໆ; ຄືມີປະຕູປ່ອງຢ້ຽມຮອບລະບຽງ. ປະຕູດ້ານໃນ ແລະ ລະບຽງວັດຄວາມຍາວໄດ້ຫ້າສິບສອກ
ແລະ ຄວາມກວ້າງໄດ້ຊາວຫ້າສອກ. 30ຍັງມີລະບຽງຢູ່ອ້ອມຮອບຝາຊັ້ນໃນ; ທັງຫມົດນີ້ ຍາວຊາວຫ້າສອກ ແລະ ກວ້າງຫ້າສອກ. 31ລະບຽງນີ້ປິ່ນ
ຫນ້າໃສ່ເດີ່ນຊັ້ນນອກ ກັບບັນດາຕົ້ນປາມແກະສະລັກຢູ່ຝາທັງຫລາຍ ແລະ ມີຂັ້ນໄດແປດຂັ້ນຍ່າງຂຶ້ນ.
32ແລ້ວຊາຍຄົນນີ້ກໍພາຂ້ານ້ອຍມາທີ່ເດີ່ນຊັ້ນໃນທາງທິດຕາເວັນອອກ ແລະ ວັດແທກປະຕູ, ຊຶ່ງໄດ້ຂະຫນາດດຽວກັນກັບປະຕູອື່ນໆ. 33ຫ້ອງຍາມ,
ຝາຕ່າງໆ ແລະ ລະບຽງວັດແທກໄດ້ຂະຫນາດດຽວກັນກັບປະຕູອື່ນໆ, ແລະ ມີປ່ອງຢ້ຽມອ້ອມຮອບ.ປະຕູດ້ານໃນ ແລະ ບ່ອນລະ-
ບຽງວັດແທກຄວາມຍາວໄດ້ຫ້າສິບສອກ ແລະ ຄວາມກວ້າງໄດ້ຊາວຫ້າສອກ. 34ລະບຽງປິ່ນໃສ່ປະຕູຊັ້ນນອກ; ຊຶ່ງມີຕົ້ນປາມທັງຫລາຍຢູ່ທີ່ເສົາ
ດ້ານລະຕົ້ນ ແລະ ຂັ້ນໄດຂຶ້ນໄປແປດຂັ້ນ.
35ແລ້ວເຂົາກໍນຳຂ້ານ້ອຍມາຍັງປະຕູທາງທິດເຫນືອ ແລະ ວັດແທກປະຕູນັ້ນ; ຊຶ່ງມີຂະຫນາດດຽວກັນກັບປະຕູອື່ນໆ. 36ບັນດາຫ້ອງຍາມ, ຝາ
ແລະ ລະບຽງຂອງປະຕູນີ້ ວັດແທກໄດ້ຂະຫນາດດຽວກັນກັບບັນດາປະຕູອື່ນໆ, ມີປ່ອງຢ້ຽມໂດຍຮອບ. ປະຕູທາງເຂົ້າ ແລະ
ລະບຽງວັດແທກຄວາມຍາວໄດ້ຫ້າສິບສອກ ແລະ ຄວາມກວ້າງໄດ້ຊາວຫ້າສອກ. 37ລະບຽງຂອງປະຕູນີ້ປິ່ນຫນ້າໃສ່ເດີ່ນຊັ້ນນອກ; ແລະ ມີຕົ້ນ
ປາມຢູ່ທີ່ເສົາດ້ານລະຕົ້ນ ແລະ ມີຂັ້ນໄດຂຶ້ນໄປແປດຂັ້ນ.


generated on Tue Jun 17 19:01:42 2025

[38]ມີຫ້ອງຫນຶ່ງ ຊຶ່ງມີປະຕູຫນຶ່ງສຳລັບແຕ່ລະທາງເຂົ້າຊັ້ນໃນ. ນີ້ຄືບ່ອນທີ່ພວກເຂົາທັງຫລາຍລ້າງເຄື່ອງເຜົາບູຊາ.
[39]ມີໂຕະດ້ານລະສອງຫນ່ວຍທີ່ລະບຽງຂອງປະຕູ, ໃຊ້ສຳລັບຂ້າເຄື່ອງຖວາຍບູຊາ, ແລະ ຍັງໃຊ້ສຳລັບເຄື່ອງບູຊາໄຖ່ບາບ ແລະ ເຄື່ອງບູຊາໄຖ່
ຄວາມຜິດບາບດ້ວຍ.
[40]ທາງເດີນຊັ້ນນອກຂອງລະບຽງ, ໄປທາງເຂົ້າປະຕູທາງທິດເຫນືອ, ມີໂຕະສອງຫນ່ວຍ. ອີກດ້ານຫນຶ່ງຂອງຂອງລະບຽງປະຕູນັ້ນມີໂຕະສອງ
ຫນ່ວຍທີ່ລະບຽງຂອງປະຕູ.[41]ມີໂຕະສີ່ຫນ່ວຍຢູ່ແຕ່ລະຂ້າງຂອງປະຕູ; ຊຶ່ງພວກເຂົາໃຊ້ເປັນບ່ອນຂ້າສັດ ເທິງໂຕະທັງແປດຫນ່ວຍນີ້.
[42]ມີໂຕະສີ່ຫນ່ວຍເຮັດດ້ວຍຫີນສະກັດສຳລັບເຄື່ອງເຜົາບູຊາ, ຍາວຫນຶ່ງສອກເຄິ່ງ ແລະ ຫນ້າກວ້າງຫນຶ່ງສອກເຄິ່ງ, ແລະ ສູງຫນຶ່ງສອກ.
ໂຕະເຫລົ່ານີ້ໃຊ້ສຳລັບວາງເຄື່ອງມື ຊຶ່ງໃຊ້ຂ້າເຄື່ອງເຜົາບູຊາ ເພື່ອພິທີສັດບູຊາ.[43]ມີຂໍເກາະສອງງ່າມ ຍາວຫນຶ່ງຝ່າມື
ຕິດເຫນັ້ນຕາມລະບຽງໂດຍຮອບ, ແລະ ຊີ້ນຂອງເຄື່ອງບູຊາ ກໍວາງເທິງໂຕະເຫລົ່ານັ້ນ.
[44]ໃກ້ປະຕູຊັ້ນໃນ, ໃນເດີນຊັ້ນໃນ, ມີຫ້ອງສຳລັບພວກນັກ-
ຮ້ອງຫ້ອງຫນຶ່ງ. ຫນຶ່ງໃນຫ້ອງເຫລົ່ານີ້ ຢູ່ທາງທິດເຫນືອ, ແລະ ອີກຫ້ອງຫນຶ່ງຢູ່ທາງທິດໃຕ້.[45]ແລ້ວຊາຍຄົນນັ້ນໄດ້ບອກຂ້ານ້ອຍວ່າ, “ຫ້ອງນີ້ປິ່ນ
ຫນ້າໄປທາງທິດໃຕ້ ແມ່ນຫ້ອງສຳລັບປະໂຣຫິດ ຜູ້ເບິ່ງແຍງພຣະວິຫານ.
[46]ຫ້ອງທີ່ປິ່ນຫນ້າໄປທາງທິດເຫນືອ ແມ່ນສຳລັບບັນດາປະໂຣຫິດຜູ້ເບິ່ງແຍງແທ່ນບູຊາ. ຄົນເຫລົ່ານີ້ເປັນບັນດາລູກຊາຍຂອງຊາດົກ
ທີ່ເຂົ້າໃກ້ພຣະຢາເວ ເພື່ອບົວລະບັດພຣະອົງ; ພວກເຂົາເປັນລູກຊາຍໃນບັນດາເຊື້ອສາຍຂອງເລວີ.[47]ແລະເຂົາກໍວັດແທກເດີ່ນໄດ້
ຄວາມຍາວຫນຶ່ງຮ້ອຍສອກ ແລະ ຄວາມກວ້າງຫນຶ່ງຮ້ອຍສອກ ຊຶ່ງເປັນສີ່ຫລ່ຽມຈັດຕຸລັດ, ພ້ອມທັງແທ່ນບູຊາຢູ່ຕໍ່ຫນ້າພຣະວິຫານ.
[48]ແລ້ວເຂົານຳຂ້ານ້ອຍມາທີ່ລະບຽງຂອງພຣະວິຫານ ແລະ ໄດ້ວັດແທກບັນດາເສົາຂອງປະຕູທັງຫລາຍ — ຊຶ່ງມີຄວາມຫນາຫ້າ
ສອກໃນແຕ່ລະດ້ານ. ປະຕູທາງເຂົ້າກວ້າງສິບສີ່ສອກ, ແລະ ສ່ວນບັນດາຝາແຕ່ລະດ້ານຂອງມັນກວ້າງສາມສອກ[49]ຄວາມຍາວຂອງລະບຽງນັ້ນ
ຊາວສອກ, ແລະ ຄວາມເລິກຂອງມັນສິບເອັດສອກ. ມີບັນດາຂັ້ນໄດຂຶ້ນໄປສູ່ລະບຽງນີ້ ແລະ ມີເສົາຕ່າງໆ ຕັ້ງຢູ່ຂ້າງປະຕູແຕ່ລະດ້ານ.


generated on Tue Jun 17 19:01:42 2025

# 41

1ຫລັງຈາກນັ້ນ ຜູ້ຊາຍຄົນນັ້ນກໍນຳຂ້ານ້ອຍມາເຖິງພຣະວິຫານອັນບໍຣິສຸດ ແລະ ໄດ້ວັດແທກເສົາ — ກວ້າງດ້ານລະຫົກສອກ.2ຄວາມກວ້າງຂອງ
ທາງເຂົ້າປະຕູນັ້ນສິບສອກ, ແລະຝາຂ້າງທາງເຂົ້າແຕ່ລະດ້ານລະຍາວຫ້າສອກ. ຊາຍຄົນນັ້ນໄດ້ວັດແທກ
ຂະຫນາດຕ່າງໆຂອງສະຖານທີ່ບໍຣິສຸດໄດ້ຄວາມຍາວສີ່ສິບສອກ ແລະ ກວ້າງຊາວສອກ.

3ແລ້ວຊາຍຄົນນັ້ນກໍໄດ້ເຂົ້າໄປໃນສະຖານທີ່ບໍຣິສຸດ ແລະ ໄດ້ວັດແທກເສົາຂອງທາງເຂົ້າ — ໄດ້ສອງສອກ, ແລະ ຄວາມກວ້າງຂອງທາງເຂົ້າ
ນັ້ນໄດ້ຫົກສອກ. ຝາຂ້າງທາງເຂົ້າແຕ່ລະດ້ານກວ້າງເຈັດສອກ.4ແລ້ວເຂົາໄດ້ວັດແທກຄວາມຍາວຂອງຫ້ອງ — ໄດ້ຊາວສອກ.
ຄວາມກວ້າງຂອງມັນແມ່ນ — ຊາວສອກ ໄປຍັງດ້ານຫນ້າຂອງຫ້ອງໂຖງໃນພຣະວິຫານ. ແລ້ວເຂົາໄດ້ບອກຂ້ານ້ອຍວ່າ, “ນີ້ ເປັນສະຖານທີ່ບໍຣິ-
ສຸດທີ່ສຸດ”
5ແລ້ວຊາຍຄົນນັ້ນກໍໄດ້ວັດແທກຝາພຣະວິຫານ — ໄດ້ຄວາມຫນາຫົກສອກ. ຄວາມກວ້າງຂອງແຕ່ລະດ້ານຂອງຫ້ອງຊຶ່ງຢູ່ຮອບພຣະວິຫານທຸກ
ດ້ານໄດ້ສີ່ສອກ.6ມີຫ້ອງດ້ານຂ້າງທັງສາມຊັ້ນ, ຫ້ອງຫນຶ່ງຢູ່ຂ້າງເທິງອີກຫ້ອງຫນຶ່ງຂອງແຕ່ລະຊັ້ນ, ມີຊັ້ນລະສາມສິບຫ້ອງ. ມີພະນັກຢູ່ຮອບຝາ
ພຣະວິຫານ, ເພື່ອຄ້ຳຫ້ອງລະບຽງ, ເພື່ອບໍ່ມີສິ່ງຄ້ຳຝາຂອງຝາພຣະວິຫານ.7ດັ່ງນັ້ນ ຫ້ອງລະບຽງນັ້ນຍິ່ງກວ້າງອອກ ແລະ ສູງຂຶ້ນໄປ,
ເພື່ອພຣະວິຫານຈະສູງຂຶ້ນ ແລະ ສູງຂຶ້ນໄປໂດຍຮອບ; ຫ້ອງທັງຫລາຍກວ້າງອອກໃນຂະນະທີ່ພຣະວິຫານນັ້ນສູງຂຶ້ນ, ແລະ
ຂັ້ນໃດນັ້ນກໍສູງຂຶ້ນໄປເລື້ອຍໆ ຈົນຮອດບ່ອນສູງສຸດ, ໂດຍຜ່ານຊັ້ນກາງຂຶ້ນໄປ.
8ແລ້ວຂ້ານ້ອຍໄດ້ເຫັນ ພຣະວິຫານນັ້ນຖືກຍົກຂຶ້ນ, ຮາກຖານຂອງຫ້ອງລະບຽງ; ວັດແທກໄດ້ຫນຶ່ງໄມ້ວັດແທກເຕັມ — ສູງຫົກສອກ.
9ຄວາມກວ້າງຂອງຝາດ້ານນອກຂອງແຕ່ລະດ້ານໄດ້ຫ້າສອກ. ມີສ່ວນພື້ນທີ່ວ່າງໄປຍັງຂ້າງນອກຂອງຫ້ອງເຫລົ່ານີ້
ເພື່ອໄປຍັງຫ້ອງຕ່າງໆໃນພຣະວິຫານ.
10ອີກດ້ານຫນຶ່ງຂອງສ່ວນທີ່ເປີດໂລ່ງຈະເປັນບັນດາຫ້ອງດ້ານນອກສຳລັບບັນດາປະໂລຫິດ; ພື້ນທີ່ຫວ່າງນີ້ມີຄວາມກວ້າງຊາວສອກ ໂດຍ
ຮອບພຣະວິຫານ.11ມີປະຕູທາງເຂົ້າໄປຍັງຫ້ອງລະບຽງ ຈາກທີ່ເປີດໂລ່ງອີກຫ້ອງຫນຶ່ງ — ທາງເຂົ້າປະຕູທາງດ້ານເຫນືອ, ແລະ
ອີກດ້ານຫນຶ່ງຢູ່ທາງທິດໃຕ້. ຄວາມກວ້າງຂອງບໍລິເວນທີ່ເປີດໂລ່ງນີ້ ໄດ້ຫ້າສອກໂດຍຮອບ.
12ຕຶກທີ່ປິ່ນຫນ້າໄປຫາເດີ່ນຂອງພຣະວິຫານທາງທິດຕາເວັນຕົກນັ້ນກວ້າງເຈັດສິບສອກ. ຝາຂອງຕຶກຫນາຫ້າສອກໂດຍຮອບ, ແລະ ຍາວເກົ້າສິບ
ສອກ.13ແລ້ວຊາຍຄົນນັ້ນກໍວັດແທກສະຖານທີ່ນະມັດສະການ — ຄວາມຍາວໄດ້ຫນຶ່ງຮ້ອຍສອກ. ສ່ວນຕຶກທີ່ແຍກອອກໄປ, ຝາ, ແລະ
ເດີ່ນຂອງມັນວັດແທກໄດ້ຍາວຫນຶ່ງຮ້ອຍສອກ.14ຄວາມກວ້າງຂອງເດີ່ນທາງຫນ້າສະຖານທີ່ນະມັດສະການ ໄດ້ຫນຶ່ງຮ້ອຍສອກ.
15ແລ້ວຊາຍຄົນນັ້ນ ກໍໄດ້ວັດແທກຄວາມຍາວຂອງຕຶກດ້ານຂ້າງສະຖານທີ່ນະມັດສະການ, ໄປທາງທິດຕາເວັນຕົກ, ແລະ
ພ້ອມທັງສະແດງງານສິນລະປະຕ່າງໆ — ອີກດ້ານຫນຶ່ງຍາວຫນຶ່ງຮ້ອຍສອກ. ສະຖານນະມັດສະການ ແລະ ລະບຽງ,16ທັງຝາດ້ານໃນ ແລະ
ປ່ອງຢ້ຽມ, ລວມທັງປະຕູນ້ອຍ, ແລະ ຫ້ອງການວາງສະແດງສິນລະປະຕ່າງໆໂດຍຮອບທັງສາມຊັ້ນ, ຊຶ່ງເປັນບານປ່ອງຢ້ຽມໄມ້ຕິດຢູ່ໂດຍຮອບ.
17ຢູ່ເຫນືອທາງເຂົ້າໄປປະຕູດ້ານໃນຂອງຫ້ອງນະມັດສະການ ແລະ ຫ້ອງໂຖງຕາມຝາຕ່າງໆ ກໍມີຮູບແບບທີ່ໄດ້ວັດໄວ້ແລ້ວ.
18ມັນຖືກປະດັບດ້ວຍຮູບເຄຣຸບ ແລະ ຮູບຕົ້ນປາມ; ໂດຍມີຮູບຕົ້ນປາມຢູ່ລະຫວ່າງເຄຣຸບແຕ່ລະອັນ, ແລະ ເຄຣຸບທຸກຕົນມີສອງຫນ້າ:19ຫນ້າຂອງ
ຜູ້ຊາຍໄດ້ຫລຽວໄປເບິ່ງຕົ້ນປາມທີ່ຢູ່ຂ້າງຫນຶ່ງ, ແລະ ຫນ້າຂອງໂຕສິງຫນຸ່ມກໍແນມໄປຍັງຕົ້ນປາມທີ່ຢູ່ອີກຂ້າງຫນຶ່ງ.
ພວກມັນຖືກແກະສະຫລັກໄວ້ທົ່ວພຣະວິຫານໂດຍຮອບ.20ຈາກພື້ນເຖິງທີ່ເຫນືອປະຕູ, ມີຮູບເຄຣຸບສອງຕົວ, ແລະ ຮູບຕົ້ນປາມແກະສະຫລັກຢູ່ທີ່
ຝາພຣະວິຫານດ້ານນອກ.
21ສ່ວນເສົາປະຕູຂອງສະຖານນະມັດສະການບໍຣິສຸດເປັນສີ່ຫລ່ຽມຈັດຕຸລັດ. ຮູບຮ່າງຂອງເສົານັ້ນກໍເຫມືອນກັບຮູບຮ່າງຂອງອີກດ້ານຫນຶ່ງ.
22ດ້ານຫນ້າຂອງສະຖານບໍຣິສຸດຂອງແທ່ນບູຊາ, ນັ້ນແຕ່ລະດ້ານເຮັດດ້ວຍໄມ້ສູງສາມສອກ ແລະ ຍາວສອງສອກ. ທັງເສົາແຈ, ຖານ ແລະ
ໂຄງເຮັດດ້ວຍໄມ້. ແລ້ວຊາຍຄົນນັ້ນໄດ້ບອກຂ້ານ້ອຍວ່າ, “ນີ້ແມ່ນໂຕະຊຶ່ງຢູ່ຕໍ່ພຣະພັກຂອງພຣະຢາເວ.-
”23ມີປະຕູຄູ່ສຳລັບສະຖານນະມັດສະການບໍຣິສຸດທີ່ສຸດ ແລະ ບ່ອນທີ່ບໍຣິສຸດທີ່ສຸດ.24ປະຕູເຫລົ່ານັ້ນມີສອງບານ, ຄືບານພັບສອງບານ, ປະຕູຫນຶ່ງ
ມີສອງບານ ແລະ ອີກປະຕູຫນຶ່ງມີສອງບານ.
25ມີການແກະສະຫລັກ — ເທິງປະຕູນັ້ນຄືປະຕູຂອງສະຖານບໍຣິສຸດ — ເປັນຮູບເຄຣຸບ ແລະ ບັນດາຕົ້ນປາມ ເພື່ອເປັນການປະດັບເທິງຝາ, ແລະ
ມີຫລັງຄາທີ່ເຮັດດ້ວຍໄມ້ເຫນືອລະບຽງທາງຫນ້າ.26ມີປ່ອງຢ້ຽມແຄບໆ ແລະ ມີຕົ້ນປາມຢູ່ແຕ່ລະດ້ານຂອງລະບຽງ.
ມີເປັນຫ້ອງຂ້າງຂອງພຣະວິຫານ, ແລະ ກໍມີບັນດາຫລັງຄາກັນສາດດ້ວຍ.

 generated on Tue Jun 17 19:01:42 2025

42 [1]ແລ້ວຊາຍຄົນນັ້ນໄດ້ພາຂ້ານ້ອຍມາເຖິງເດີ່ນຊັ້ນນອກ ຊື່ໄປທາງທິດເຫນືອ, ແລະ ເຂົາໄດ້ນຳຂ້ານ້ອຍມາເຖິງຫ້ອງທັງຫລາຍຊຶ່ງຢູ່ກົງກັນ-
ຂ້າມກັບເດີ່ນດ້ານນອກ ແລະ ທາງທິດເຫນືອນອກກຳແພງ.[2]ຫ້ອງເຫລົ່ານີ້ເປັນຫນຶ່ງຮ້ອຍສອກທີ່ຢູ່ຫນ້າ ແລະ ກວ້າງຫ້າສິບສອກ.
[3]ຫ້ອງເຫລົ່ານີ້ບາງຫ້ອງຕິດກັບເດີ່ນຊັ້ນໃນ ແລະ ຊຶ່ງຢູ່ຫ່າງຈາກສະຖານນະມັດສະການເປັນຊາວສອກ. ມີຫ້ອງຕ່າງໆ ຢູ່ສາມຊັ້ນ, ແລະ
ຫ້ອງຊັ້ນເທິງກໍແນມລົງມາຊັ້ນລຸ່ມ ເປັນລະບຽງຊ້ອນລະບຽງສາມຊັ້ນ ແລະ ເປີດໃຫ້ພວກເຂົາ, ມີທາງເດີນ.
ຫ້ອງບາງຫ້ອງປີ້ນໄປທາງເດີ່ນຊັ້ນນອກ.

[4]ຂ້າງຫນ້າຂອງຫ້ອງຕ່າງໆນັ້ນກວ້າງສິບສອກ ແລະ ຍາວຫນຶ່ງສອກ ຍາວໄປເຖິງຫ້ອງດ້ານຫນ້າ. ບັນດາປະຕູຫ້ອງເຫລົ່ານີ້ປີ້ນໄປທາງທິດ
ເຫນືອ.[5]ແຕ່ຫ້ອງຊັ້ນເທິງແຄບກວ່າ, ເພາະລະບຽງເຫລົ່ານີ້ໃຊ້ພື້ນທີ່ຫລາຍກວ່າທີ່ພວກເຂົາເຮັດຈາກຊັ້ນລຸ່ມ ແລະ ຊັ້ນກາງຂອງອາຄານນັ້ນ.
[6]ເພາະວ່າເປັນຫ້ອງສາມຊັ້ນບໍ່ມີເສົາຮອງເຫມືອນ, ດັ່ງເສົາທີ່ຢູ່ເດີ່ນຂ້າງນອກ, ຊຶ່ງມີເສົາຮອງຮັບ, ເພາະສະນັ້ນ ຫ້ອງຊັ້ນເທິງສຸດຈຶ່ງແຄບ
ເຂົ້າໄປຫລາຍກວ່າຂະຫນາດເມື່ອປຽບທຽບກັບຫ້ອງຕ່າງໆ ຂອງຊັ້ນລຸ່ມສຸດ ແລະ ຊັ້ນກາງ.
[7]ຝາຊັ້ນນອກຕິດກັບຫ້ອງທີ່ຊື່ໄປຍັງເດີ່ນຊັ້ນນອກ, ເດີ່ນຊັ້ນນອກຊຶ່ງຢູ່ທາງຫນ້າຫ້ອງທັງລຫາຍ. ຄວາມຍາວຂອງຝາຫ້າສິບສອກ.
[8]ຄວາມຍາວຂອງຫ້ອງເດີ່ນຊັ້ນນອກຍາວຫ້າສິບສອກ, ແລະ ຫ້ອງປີ້ນຫນ້າໄປທາງສະຖານນະມັດສະການມີຄວາມຍາວຫນຶ່ງຮ້ອຍສອກ.
[9]ມີທາງເຂົ້າທີ່ຫ້ອງເຫລົ່ານັ້ນທີ່ຢູ່ຊັ້ນລຸ່ມສຸດຂອງຫ້ອງຈາກທາງທິດຕະເວັນອອກ, ຊຶ່ງມາຈາກທາງເດີ່ນຊັ້ນນອກ.
[10]ຊຶ່ງຝາຂອງເດີ່ນຊັ້ນນອກທາງທິດຕາເວັນອອກກໍເຊັ່ນດຽວກັນ, ເດີ່ນຊັ້ນໃນຂອງດ້ານຫນ້າສະຖານນະມັດສະການ,
ຊຶ່ງມີຫ້ອງຫລາຍຫ້ອງ[11]ທາງຍ່າງຢູ່ຫນ້າຫ້ອງເຫລົ່ານັ້ນ. ລັກສະນະທາງຍ່າງເຫລົ່ານີ້ຄ້າຍຄືກັບຫ້ອງທາງທິດເຫນືອ. ຄວາມຍາວ ແລະ ຄວາມ
ກວ້າງຂະຫນາດດຽວກັນ. ມີທາງອອກ ແລະ ການຈັດວາງ ແລະ ປະຕູຢ່າງດຽວກັນ.[12]ຢູ່ທາງທິດໃຕ້ມີປະຕູທີ່ ເຫມືອນກັບທາງທິດເຫນືອ.
ທາງດ້ານໃນມີປະຕູທີ່ສ່ວນດ້ານຫນ້າ, ແລະ ທາງຍ່າງເຂົ້າໄປໃນຫ້ອງໃນຕ່າງໆ, ທາງທິດຕາເວັນອອກນັ້ນ ກໍມີທາງເຂົ້າປະຕູທາງດ້ານຫນຶ່ງ.
[13]ແລ້ວຊາຍຄົນນັ້ນໄດ້ກ່າວແກ່ຂ້ານ້ອຍວ່າ, “ຫ້ອງທາງທິດເຫນືອ ແລະ ຫ້ອງທາງທິດໃຕ້ກົງກັນຂ້າມເດີ່ນຊັ້ນນອກ ເປັນຫ້ອງບໍຣິສຸດ ບ່ອນທີ່ປະ-
ໂລຫິດທັງຫລາຍຜູ້ເຂົ້າໃກ້ພຣະຢາເວ ຈະຮັບປະທານຂອງຖວາຍອັນບໍຣິສຸດທີ່ສຸດ. ພວກເຂົາຈະວາງຂອງຖວາຍອັນບໍຣິສຸດທີ່ສຸດນັ້ນ ໄວ້ບ່ອນນັ້ນ
— ເຄື່ອງບູຊາພືດຜົນເປັນເມັດ, ເຄື່ອງບູຊາໄຖ່ບາບ, ເຄື່ອງບູຊາໄຖ່ຄວາມຜິດ — ເພາະວ່າບ່ອນນັ້ນບໍຣິສຸດ.[14]ເມື່ອປະໂລຫິດທັງຫມົດເຂົ້າໄປໃນ
ບ່ອນບໍຣິສຸດ, ພວກເຂົາຈະບໍ່ອອກໄປຈາກບ່ອນບໍຣິສຸດເຂົ້າສູ່ເດີ່ນຊັ້ນນອກ, ໂດຍບໍ່ໄດ້ປົດເຄື່ອງແຕ່ງກາຍທີ່ພວກເຂົານຸ່ງປະຕິບັດຫນ້າທີ່ວາງໄວ້
ບ່ອນນັ້ນ, ເພາະສິ່ງເຫລົ່ານີ້ບໍຣິສຸດ. ດັ່ງນັ້ນ ພວກເຂົາຈະຕ້ອງນຸ່ງເຄື່ອງແຕ່ງກາຍອື່ນກ່ອນທີ່ພວກເຂົາຈະເຂົ້າໄປໃກ້ປະຊາຊົນ.”
[15]ເມື່ອຊາຍຄົນນັ້ນໄດ້ວັດແທກທາງຂ້າງບໍລິເວນພຣະວິຫານສຳເລັດແລ້ວ ແລະ ເຂົາກໍນຳຂ້ານ້ອຍອອກມາທາງປະຕູຊຶ່ງປີ້ນຫນ້າໄປທາງທິດຕາ-
ເວັນອອກ ແລະ ວັດແທກບໍລິເວນພຣະວິຫານໂດຍຮອບ.
[16]ເຂົາໄດ້ວັດແທກທາງທິດຕາເວັນອອກດ້ວຍໄມ້ວັດແທກໄດ້ — ຫ້າຮ້ອຍສອກ ຕາມໄມ້ວັດແທກໂດຍຮອບ.[17]ແລ້ວເຂົາກໍຫັນມາວັດແທກທາງທິດ-
ເຫນືອໄດ້ — ຫ້າຮ້ອຍສອກ ຕາມໄມ້ວັດແທກໂດຍຮອບ.[18]ແລ້ວເຂົາກໍມາວັດແທກທາງທິດໃຕ້ໄດ້ — ຫ້າຮ້ອຍສອກ ຕາມໄມ້ວັດແທກ.[19]ແລ້ວເຂົາ
ກໍຫັນມາ — ວັດແທກທາງທິດຕາເວັນຕົກ — ໄດ້ຫ້າຮ້ອຍສອກຕາມໄມ້ວັດແທກດ້ວຍ.
[20]ເຂົາວັດແທກທັງສີ່ດ້ານ. ມີຝາອ້ອມຮອບຍາວຫ້າຮ້ອຍສອກ, ແລະ ກວ້າງຫ້າຮ້ອຍສອກ, ເປັນບ່ອນແບ່ງລະຫວ່າງສະຖານທີ່ບໍຣິສຸດ ແລະ
ສະຖານທີ່ທົ່ວໄປ.

 generated on Tue Jun 17 19:01:42 2025

43 1ຊາຍຄົນນັ້ນໄດ້ນໍາຂ້ານ້ອຍມາຍັງປະຕູ ຊຶ່ງເປີດສູ່ທາງທິດຕາເວັນອອກ.2ເບິ່ງແມ໋! ພຣະສະຫງ່າຣາສີຂອງພຣະເຈົ້າແຫ່ງອິດສະຣາເອນມາ
ຈາກທິດຕາເວັນອອກ, ແລະ ພຣະສຸລະສຽງຂອງພຣະອົງກໍເຫມືອນດັ່ງສຽງນໍ້າ, ແລະ ແຜ່ນດິນກໍຮຸ່ງເຮືອງດ້ວຍພຣະສະຫງ່າຣາສີຂອງ
ພຣະອົງ.

3ຕາມນິມິດທີ່ປົກກົດແກ່ຂ້ານ້ອຍທີ່ຂ້ານ້ອຍໄດ້ເຫັນ, ຕາມທີ່ຂ້ານ້ອຍໄດ້ເຫັນນິມິດ ເມື່ອພຣະອົງສະເດັດມາທໍາລາຍເມືອງນັ້ນ, ແລະ
ນິມິດນັ້ນເຫມືອນກັບນິມິດທີ່ຂ້ານ້ອຍໄດ້ເຫັນຢູ່ແຄມແມ່ນໍ້າເກບາ ແລະ ຂ້ານ້ອຍກໍກົ້ມຫນ້າຂອງຂ້ານ້ອຍລົງເຖິງດິນ.4ດັ່ງນັ້ນ
ພຣະສະຫງ່າຣາສີຂອງພຣະຢາເວໄດ້ເຂົ້າມາສູ່ພຣະວິຫານທາງປະຕູທີ່ເປີດອອກໄປທາງທິດຕາເວັນອອກ.5ແລ້ວພຣະວິນຍານກໍຍົກຂ້ານ້ອຍຂຶ້ນ
ແລະ ໄດ້ນໍາຂ້ານ້ອຍມາທີ່ເດີ່ນຊັ້ນໃນ. ເບິ່ງແມ໋! ພຣະສະຫງ່າຣາສີຂອງພຣະຢາເວ ໄດ້ປົກຄຸມທົ່ວພຣະວິຫານ.
6ຊາຍຄົນນັ້ນກໍາລັງຢືນຢູ່ທີ່ຂ້າງຂ້ານ້ອຍ, ແລະ ຂ້ານ້ອຍໄດ້ຍິນຜູ້ຫນຶ່ງເວົ້າກັບຂ້ານ້ອຍມາຈາກພຣະວິຫານ.7ພຣະອົງຊຶ່ງກ່າວກັບຂ້ານ້ອຍວ່າ,
“ບຸດແຫ່ງມະນຸດເອີຍ, ນີ້ເປັນບັນລັງ ແລະ ແທ່ນວາງຕີນຂອງເຮົາຢູ່ບ່ອນນີ້, ເປັນບ່ອນທີ່ເຮົາສະຖິດຢູ່ທ່າມກາງຊົນຊາດອິດສະຣາເອນເປັນນິດ.
ເຊື້ອສາຍຂອງອິດສະຣາເອນ ຈະບໍ່ຖືກຫມິ່ນປະຫມາດນາມຊື່ຂອງເຮົາ — ພວກເຂົາ ຫລືກະສັດຂອງເຂົາ — ພ້ອມຄວາມບໍ່ສັດຊື່ຂອງເຂົາ
ຫລື ຊາກສົບຂອງກະສັດຂອງເຂົາໃນສະຖານສູງທັງຫລາຍ.8ພວກເຂົາຈະບໍ່ຫມິ່ນປະຫມາດນາມຊື່ອັນບໍລິສຸດຂອງເຮົາ
ໂດຍການວາງຂອບເຂດປະຕູຂອງພວກເຂົາຖັດຂອບເຂດປະຕູຂອງເຮົາ, ແລະ ຮົ້ວກັ້ນຂອງເຂົາທັງຫລາຍຖັດຈາກຂອງເຮົາ, ບໍ່ມີຫຍັງກັ້ນ
ແຕ່ມີພຽງຝາຢູ່ລະຫວ່າງເຮົາ ແລະ ພວກເຂົາ. ພວກເຂົາເຮັດໃຫ້ນາມຊື່ອັນບໍລິສຸດຂອງເຮົາເປັນມົນທິນໂດຍການກະທໍາອັນຫນ້າກຽດຊັງ,
ບໍ່ສະນັ້ນ ເຮົາຈະທໍາລາຍເຂົາດ້ວຍຄວາມໂກດຮ້າຍຂອງເຮົາ.
9ບັດນີ້ ໃຫ້ພວກເຂົາກໍາຈັດຄວາມບໍ່ສັດຊື່ ແລະ ຊາກສົບແຫ່ງກະສັດທັງຫລາຍຂອງພວກເຂົາ ໃຫ້ຫ່າງໄກຈາກເຮົາ, ແລະເຮົາຈະຢູ່ທ່າມກາງ
ພວກເຂົາທັງຫລາຍຕະຫລອດເປັນນິດ
10ບຸດແຫ່ງມະນຸດເອີຍ, ເຈົ້າເອງຕ້ອງບອກເຊື້ອສາຍຂອງອິດສະຣາເອນກ່ຽວກັບພຣະວິຫານ ເພື່ອວ່າພວກເຂົາ
ຈະລະອາຍໃຈໃນຄວາມຊົ່ວຮ້າຍຂອງພວກເຂົາ. ໃຫ້ພວກເຂົາພິຈາລະນາກ່ຽວກັບຄໍາອະທິບາຍນີ້.11ເພາະວ່າຖ້າພວກເຂົາລະອາຍໃນສິ່ງທັງ-
ຫລາຍທີ່ຕົນໄດ້ເຮັດນັ້ນ, ກໍຈົ່ງເປີດເຜີຍໃຫ້ພວກເຂົາຮູ້ກ່ຽວກັບອອກແບບພຣະວິຫານ, ຢ່າງລະອຽດ, ທາງອອກ, ຮູບແບບທັງຫມົດ
ຕະຫລອດຈົນກົດບັນຍັດ ແລະ ກົດຫມາຍທັງຫມົດຕ່າງໆ. ແລ້ວຈົ່ງບັນທຶກສິ່ງເຫລົ່ານີ້ໄວ້ຕໍ່ຫນ້າພວກເຂົາ
ເພື່ອວ່າພວກເຂົາຈະເຮັດຕາມຮູບແບບ ແລະ ປະຕິບັດຕາມກົດບັນຍັດທັງປວງ, ເພື່ອຈະເຊື່ອຟັງພວກເຂົາ.
12ນີ້ເປັນກົດເກນຂອງພຣະວິຫານ: ຈາກທີ່ສູງສຸດຂອງເນີນພູເຖິງຂອບເຂດອ້ອມຮອບ, ຈະເປັນບ່ອນທີ່ບໍລິສຸດທີ່ສຸດ. ເບິ່ງແມ໋! ນີ້ເປັນກົດເກນຂອງ
ພຣະວິຫານ.
13ນີ້ເປັນການວັດແທກແທ່ນບູຊາ ວັດແທກເປັນສອກ — ຄວາມຍາວສອກຫນຶ່ງກໍເທົ່າກັບສອກຫນຶ່ງຕາມປົກກະຕິ ແລະ ຫນຶ່ງຝາມື. ດັ່ງນັ້ນ
ຮາງຫລິນຮອບແທ່ນບູຊານັ້ນ ເລິກຫນຶ່ງສອກ, ແລະ ກວ້າງຫນຶ່ງສອກ. ບ່ອນຂອບຮອບໆມີຂອບຫນຶ່ງຄືບ ນີ້ຈະເປັນຖານຂອງແທ່ນບູຊານີ້14ຈາກ
ຮາງລົນເຖິງພື້ນຂອງແທ່ນບູຊານັ້ນສູງສອງສອກ, ແລະ ຂອບຂອງມັນນັ້ນກວ້າງຫນຶ່ງສອກ.
ແລ້ວຈາກຂອບທີ່ນ້ອຍຫາຂອບທີ່ໃຫຍ່ກວ່າຂອງແທ່ນບູຊາ, ສີ່ສອກ, ແລະ ຂອບໃຫຍ່ກວ້າງຫນຶ່ງສອກ.
15ໃຈກາງຂອງແທ່ນບູຊາສໍາລັບເຄື່ອງຖວາຍບູຊານັ້ນສູງສີ່ສອກ, ແລະ ເທິງຈອມທັງສີ່ຍືນຂຶ້ນມາຈາກໃຈກາງຂອງແທ່ນ.16ໃຈກາງແທ່ນບູຊານັ້ນ
ເປັນສີ່ຫລ່ຽມຈັດຕຸລັດກວ້າງຍາວດ້ານລະສິບສອງສອກ.17ຂອບຂ້າງເທິງ ກໍເປັນສີ່ຫລ່ຽມຈັດຕຸລັດຄືກັນ ກວ້າງຍາວແຕ່ລະດ້ານສິບສີ່ສອກ,
ຮີມຂອບຫນາເຄິ່ງສອກ ແລະ ມີຮາງລິນຂະຫນາດຫນຶ່ງສອກໂດຍຮອບ ຂັ້ນໄດຂອງແທ່ນບູຊາປີ່ນໄປທາງທິດຕາເວັນອອກ.”
18ແລະເຂົາໄດ້ເວົ້າກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ພຣະຢາເວ ອົງພຣະຜູ້ເປັນເຈົ້າຊຶ່ງກ່າວດັ່ງນີ້ວ່າ: ຕໍ່ໄປນີ້ເປັນ
ກົດເກນຂອງການຖວາຍເຄື່ອງເຜົາບູຊາ ແລະ ການພົມເລືອດເຫນືອແທ່ນບູຊາໃນວັນທີ່ສ້າງສໍາເລັດ.19ເຈົ້າຈະມອບງົວຫນຸ່ມໂຕຫນຶ່ງເປັນເຄື່ອງບູ-
ຊາໄຖ່ບາບແກ່ບັນດາປະໂລຫິດຄົນເລວີເຊື້ອສາຍຂອງຊາດົກ, ຜູ້ທີ່ເຂົ້າມາໃກ້ເພື່ອບົວລະບັດເຮົາ — ນີ້ເປັນຄໍາປະກາດຂອງພຣະຢາເວ ອົງ-
ພຣະຜູ້ເປັນເຈົ້າ.
20ແລ້ວເຈົ້າຈະເອົາເລືອດບາງສ່ວນ ແລະ ທາທີ່ເທິງຈອມທັງສີ່ຂອງແທ່ນບູຊາ ແລະ ທີ່ແຈທັງສີ່ຂອງຂອບເທິງ ແລະ ຮີມໂດຍຮອບ;
ເຈົ້າຈະຊໍາຣະແທ່ນບູຊາ ແລະ ລົບລ້າງບາບທີ່ນັ້ນ.21ແລ້ວຈົ່ງເອົາງົວເຖິກເປັນເຄື່ອງບູຊາໄຖ່ບາບ ແລະ ເຜົາໃນບ່ອນທີ່ກໍານົດໄວ້ໃນບໍລິເວນພຣະວິ-
ຫານຊັ້ນນອກຂອງສະຖານນະມັດສະການ.
22ແລ້ວໃນມື້ທີສອງ ເຈົ້າຈະຖວາຍແບ້ໂຕຜູ້ທີ່ບໍ່ມີຕໍາຫນິ ເພື່ອເປັນເຄື່ອງບູຊາໄຖ່ບາບ;
ປະໂລຫິດຈະຊໍາຣະແທ່ນບູຊາເຫມືອນກັບທີ່ພວກເຂົາຊໍາຣະດ້ວຍງົວເຖິກ.23ເມື່ອເຈົ້າໄດ້ຊໍາລະແທ່ນບູຊາສໍາເລັດແລ້ວ, ຈົ່ງຖວາຍງົວ
ຫນຸ່ມທີ່ບໍ່ມີຕໍານິໂຕຫນຶ່ງຈາກຝູງ ແລະ ແກະຜູ້ທີ່ບໍ່ມີຕໍານິຄັດມາຈາກຝູງໂຕຫນຶ່ງ.24ຈົ່ງຖວາຍສັດທັງສອງຕໍ່ພຣະພັກພຣະຢາເວ; ປະໂລ-
ຫິດທັງຫລາຍຈະເອົາເກືອໂຮຍລົງເທິງພວກມັນເຫມືອນກັບເຄື່ອງເຜົາບູຊາທີ່ຖວາຍແກ່ພຣະຢາເວ.
25ເຈົ້າຕ້ອງກຽມແບ້ຜູ້ມື້ລະໂຕ ເພື່ອເປັນເຄື່ອງບູຊາໄຖ່ບາບຈົນຄົບເຈັດມື້, ແລະ ປະໂລຫິດຈົ່ງຕຽມງົວ
ຫນຸ່ມທີ່ປາດສະຈາກຕໍາຫນິໂຕຫນຶ່ງຈາກຝູງ ແລະ ແກະຜູ້ທີ່ປາດສະຈາກຕໍານິເລືອກມາຈາກຝູງໂຕຫນຶ່ງ.26ພວກເຂົາຕ້ອງລົບລ້າງ
ສໍາລັບແທ່ນບູຊາສໍາລັບເຈັດມື້ ແລະ ຊໍາຣະໃຫ້ສະອາດ, ແລະ ໂດຍວິທີນີ້ແຫລະ ພວກເຂົາຕ້ອງໄດ້ຊໍາຣະມັນ.27ພວກເຂົາເຮັດຄົບເຈັດມື້, ແລະ
ຕັ້ງແຕ່ວັນທີແປດເປັນຕົ້ນໄປ, ແລະ ບັນດາປະໂລຫິດຈະຕ້ອງຖວາຍເຄື່ອງເຜົາບູຊາ ແລະ ຖວາຍເຄື່ອງບູຊາສັນຕິພາບຂອງພວກເຈົ້າ
ຢູ່ເທິງແທ່ນບູຊາ, ແລະ ເຮົາຈະຍອມຮັບພວກເຈົ້າ — ນີ້ເປັນຄໍາປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ."

44 [1]ແລ້ວຊາຍຜູ້ນັ້ນໄດ້ນຳຂ້ານ້ອຍ ມາເດີ່ນຊັ້ນນອກທາງປະຕູຂອງສະຖານນະມັດສະການທີ່ປິ່ນຫນ້າໄປທາງທິດຕາເວັນອອກ; ປະຕູນັ້ນ
ປິດຢ່າງແຫນ້ນຫນາ.[2]ພຣະຢາເວຊົງກ່າວກັບຂ້ານ້ອຍວ່າ, “ປະຕູນີ້ຖືກປິດປະທັບຕາໄວ້; ຊຶ່ງບໍ່ຖືກເປີດອີກ.
ບໍ່ມີມະນຸດຄົນໃດສາມາດຜ່ານນເຂົ້າໄປທາງນີ້ໄດ້, ເພາະພຣະຢາເວ, ພຣະເຈົ້າແຫ່ງອິດສະຣາເອນ, ໄດ້ສະເດັດຜ່ານເຂົ້າໄປທາງນີ້, ສະນັ້ນ
ມັນຈຶ່ງຖືກປິດຢ່າງແໜ້ນຫນາ.[3]ຜູ້ປົກຄອງຂອງອິດສະຣາເອນຈະນັ່ງໃນນັ້ນເພື່ອຮັບປະທານອາຫານຕໍ່ພຣະພັກພຣະຢາເວ.
ເຂົາຈະເຂົ້າໄປທາງປະຕູລະບຽງ ແລະ ອອກມາທາງດຽວກັນ.”

[4]ແລ້ວເຂົາໄດ້ນຳຂ້ານ້ອຍໄປທາງປະຕູດ້ານເຫນືອ ຊຶ່ງປິ່ນຫນ້າໃສ່ພຣະວິຫານ. ສະນັ້ນ ຂ້ານ້ອຍເບິ່ງ ແລະ ເບິ່ງແມ໋, ພຣະສະຫງ່າຣາສີຂອງ
ພຣະຢາເວປົກຄຸມພຣະວິຫານຂອງພຣະຢາເວ, ແລະ ຂ້ານ້ອຍກໍກົ້ມຫນ້າລົງເຖິງດິນ.[5]ແລ້ວພຣະຢາເວຊົງກ່າວກັບຂ້ານ້ອຍວ່າ, “ບຸດແຫ່ງມະ-
ນຸດເອີຍ, ຈົ່ງຕັ້ງໃຈ ແລະ ເບິ່ງໃຫ້ເຕັມຕາ ແລະ ຈົ່ງຟັງໃຫ້ເຕັມຫູ ໃນສິ່ງທີ່ເຮົາກຳລັງຈປະກາດກັບເຈົ້າ, ໃນເລື່ອງກົດເກນທັງຫມົດຂອງພຣະວິ-
ຫານຂອງພຣະຢາເວ ແລະ ກົດຫມາຍທັງຫມົດ. ຈົ່ງເອົາໃຈໃສ່ເລື່ອງທາງເຂົ້າ ແລະ ທາງອອກຂອງພຣະວິຫານ.
[6]ແລ້ວຈົ່ງກ່າວແກ່ຜູ້ທີ່ກະບົດວ່າ, ຄືເຊື້ອສາຍຂອງອິດສະຣາເອນ, 'ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ໂອ ພໍແລ້ວກັບການເຮັດສິ່ງທີ່
ຫນ້າກຽດຊັງທັງຫມົດຂອງພວກເຈົ້າ, ເຊື້ອສາຍຂອງອິດສະຣາເອນເອີຍ —[7]ທີ່ເຈົ້າພາຄົນຕ່າງດ້າວທີ່ບໍ່ໄດ້ເຂົ້າພິທີຕັດທັງກາຍ ແລະ ໃຈ
ເຂົ້າມາຍັງພຣະວິຫານຂອງເຮົາ, ເຮັດໃຫ້ພຣະວິຫານມົວຫມອງ, ໃນຂະນະທີ່ເຈົ້າຖວາຍອາຫານ, ໄຂມັນ ແລະ ເລືອດ ໃຫ້ແກ່ເຮົາ — ເຈົ້າ
ໄດ້ລະເມີດຄຳຫມັ້ນສັນຍາຂອງເຮົາໂດຍການກະທຳອັນຫນ້າກຽດຊັງທັງຫມົດຂອງພວກເຈົ້າ.
[8]ເຈົ້າບໍ່ໄດ້ເຮັດຫນ້າທີ່ຂອງເຈົ້າໃນການເບິ່ງແຍງສິ່ງທີ່ບໍຣິສຸດຂອງເຮົາ, ແຕ່ເຈົ້າໄດ້ແຕ່ງຕັ້ງໃຫ້ຄົນອື່ນມາຮັບຜິດຊອບຫນ້າທີ່ຂອງເຈົ້າແທນ, ແລະ
ເຈົ້າມອບໃຫ້ພວກເຂົາເບິ່ງແຍງສະຖານທີ່ບໍຣິສຸດຂອງເຮົາ.[9]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຢ່າໃຫ້ຄົນຕ່າງຊາດຄົນໃດ, ທີ່ບໍ່ໄດ້-
ເຂົ້າພິທີຕັດທັງກາຍ ແລະ ໃຈ, ຊຶ່ງມາຈາກຄົນເຫລົ່ານັ້ນທີ່ຢູ່ທ່າມກາງປະຊາຊົນອິດສະຣາເອນ, ເຂົ້າມາໃນສະຖານທີ່ສັກສິດຂອງເຮົາ.
[10]ດັ່ງນັ້ນ ຊາວເລວີ ທີ່ຫ່າງໄກຈາກເຮົາ — ພວວກເຂົາໄດ້ອອກໄປຈາກເຮົາ, ຕິດຕາມຮູບເຄົາລົບທັງຫລາຍຂອງເຂົາ —
ແຕ່ພວກເຂົາຕ້ອງໄດ້ຈ່າຍຄ່າແຫ່ງຄວາມບາບຂອງເຂົາ.[11]ພວກເຂົາເປັນຜູ້ຮັບໃຊ້ໃນພຣະວິຫານຂອງເຮົາ, ເຝົ້າຍາມຢູ່ທີ່ປະຕູພຣະວິຫານ ແລະ
ຮັບໃຊ້ຢູ່ໃນພຣະວິຫານ ແລະ ພວກເຂົາຂ້າສັດເພື່ອເປັນເຄື່ອງເຜົາບູຊາ ແລະ ເຄື່ອງບູຊາຕ່າງໆ ໃຫ້ປະຊາຊົນ, ແລະ
ພວກເຂົາຢືນຢູ່ຕໍ່ຫນ້າປະຊາຊົນທັງຫລາຍ ແລະ ຮັບໃຊ້ພວກເຂົາ.
[12]ແຕ່ເນື່ອງຈາກພວກເຂົາເຄີຍຮັບໃຊ້ປະຊາຊົນຕໍ່ຫນ້າຮູບເຄົາລົບຕ່າງໆຂອງພວກເຂົາ, ແລະ ໄດ້ເຮັດໃຫ້ເຊື້ອສາຍຂອງອິດສະຣາເອນຕົກຢູ່ໃນ
ຄວາມຊົ່ວຊ້າໃນການເຮັດບາບ. ສະນັ້ນ ເຮົາຈະຍົກມືສາບານວ່າຈະຕໍ່ສູ້ພວກເຂົາ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ —
ພວກເຂົາຈະຕ້ອງຮັບໂທດຂອງເຂົາ.
[13]ພວກເຂົາຈະບໍ່ເຂົ້າມາໃກ້ເຮົາ ເພື່ອເປັນປະໂລຫິດທັງຫລາຍຂອງເຮົາ ຫລື ເຂົ້າໃກ້ສິ່ງໃດສິ່ງຫນຶ່ງທີ່ບໍຣິສຸດຂອງເຮົາ, ສິ່ງທີ່ບໍຣິສຸດທີ່ສຸດ.
ແຕ່ວ່າພວກເຂົາຈະທົນຮັບຄວາມອັບອາຍຂາຍຫນ້າ ແລະ ຄວາມຜິດທີ່ເຂົາໄດ້ເຮັດແທນ.[14]ແຕ່ເຮົາຈະຕັ້ງໃຫ້ພວກເຂົາເປັນຜູ້ເບິ່ງແຍງໃນພຣະ-
ວິຫານໃນຫນ້າທີ່ທຸກຢ່າງ ແລະ ງານທັງປວງໃນພຣະວິຫານ, ສຳລັບຫນ້າທີ່ທັງຫລາຍ ແລະ ສິ່ງທັງປວງທີ່ໄດ້ເຮັດນັ້ນ.
[15]ແລ້ວປະໂລຫິດຄົນເລວີ, ບັນດາລູກຊາຍຂອງຊາດົກ ຜູ້ເຮັດຫນ້າທີ່ຢ່າງສົມບູນໃນພຣະວິຫານຂອງເຮົາ ເມື່ອຄົນອິດສະຣາເອນຫລົງໄປຈາກ
ເຮົານັ້ນ — ພວກເຂົາຈະເຂົ້າມາໃກ້ເຮົາເພື່ອນະມັດສະການເຮົາ. ພວກເຂົາຈະຢືນຢູ່ຕໍ່ຫນ້າເຮົາ ເພື່ອຖວາຍເຄື່ອງບູຊາໃຫ້ແກ່ເຮົາ ຄືໄຂມັນ
ແລະ ເລືອດ — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.[16]ພວກເຂົາຈະເຂົ້າມາໃນພຣະວິຫານຂອງເຮົາ;
ພວກເຂົາຈະເຂົ້າມາໃນໂຕະຂອງເຮົາເພື່ອນະມັດສະການເຮົາ ແລະ ປະຕິບັດຫນ້າທີ່ຂອງເຂົາໃຫ້ສຳເລັດເພື່ອເຮົາ.
[17]ດັ່ງນັ້ນ ພວກເຂົາ ຈະເຂົ້າປະຕູເດີ່ນຊັ້ນໃນ, ພວກເຂົາຈະແຕ່ງກາຍດ້ວຍຜ້າປ່ານເນື້ອດີ, ເພາະພວກເຂົາຈະບໍ່ສວມເຄື່ອງແຕ່ງກາຍຂົນສັດໃດໆ
ທີ່ພາຍໃນປະຕູຕ່າງໆຂອງເດີ່ນຊັ້ນໃນ ແລະ ພາຍໃນພຣະວິຫານ.[18]ໃຫ້ພວກເຂົາໃສ່ຜ້າຄຽນຫົວທີ່ເປັນຜ້າປ່ານໄວ້ເຫນືອຫົວ ແລະ
ແຕ່ງກາຍຊັ້ນໃນທີ່ເຮັດມາຈາກຜ້າປ່ານພຽງແອວ. ພວກເຂົາຕ້ອງບໍ່ນຸ່ງເຄື່ອງທີ່ເຮັດໃຫ້ມີເຫື່ອອອກ.
[19]ເມື່ອພວກເຂົາອອກໄປຍັງເດີ່ນຊັ້ນນອກ, ຢູ່ທີ່ເດີ່ນຊັ້ນນອກເພື່ອໄປຫາບ່ອນປະຊາຊົນຢູ່, ພວກເຂົາຕ້ອງຖອດ
ເຄື່ອງແຕ່ງກາຍທີ່ປະຕິບັດຫນ້າທີ່ອອກ; ພວກເຂົາຕ້ອງຖອດມັນອອກ ແລະ ວາງໄວ້ໃນຫ້ອງສັກສິດ, ດັ່ງນັ້ນ
ພວກເຂົາຈະບໍ່ໄດ້ເຮັດໃຫ້ຄົນອື່ນບໍຣິສຸດໂດຍການແຕະຕ້ອງເຄື່ອງແຕ່ງກາຍພິເສດຂອງພວກເຂົາ.
[20]ພວກເຂົາຈະຕ້ອງບໍ່ແຖຜົມ ຫລື ປ່ອຍຜົມຍາວໃຫ້ຫຍຸ້ງ, ແຕ່ພວກເຂົາຈະຕ້ອງມ້ວນຜົມເທິງຫົວຂອງພວກເຂົາ,[21]ບໍ່ໃຫ້ປະໂລຫິດຄົນໃດດື່ມ
ເຫລົ້າອະງຸ່ນ ເມື່ອເວລາເຂົ້າໄປໃນເດີ່ນຊັ້ນໃນ.[22]ຫລື ເອົາແມ່ຫມ້າຍ ຫລື ຜູ້ຍິງທີ່ປະຮ້າງມາເປັນເມຍ, ແຕ່ຕ້ອງເປັນຜູ້ຍິງພົມມະຈາລີຈາກເຊື້ອ-
ສາຍແຫ່ງອິດສະຣາເອນເທົ່ານັ້ນ ຫລື ແມ່ຫມ້າຍຜູ້ຊຶ່ງແຕ່ງງານກັບປະໂລຫິດມາກ່ອນ.
[23]ເພາະພວກເຂົາທັງຫລາຍຈະຕ້ອງສັ່ງສອນປະຊາຊົນຂອງເຮົາ ເຖິງຄວາມແຕກຕ່າງລະຫວ່າງສິ່ງທີ່ບໍຣິສຸດ ແລະ ສິ່ງທີ່ເປັນມົນທິນ;
ພວກເຂົາຈະສອນໃຫ້ປະຊາຊົນຮູ້ຈັກແຍກແຍະລະຫວ່າງສິ່ງທີ່ສະອາດ ແລະ ສິ່ງທີ່ບໍ່ສະອາດ.[24]ເມື່ອມີຄະດີ ພວກເຂົາຈະຕ້ອງເຮັດຫນ້າທີ່ພິ-
ພາກສາຕັດສິນຄວາມຕາມກົດຫມາຍຂອງເຮົາດ້ວຍ; ພວກເຂົາເຮັດຫນ້າທີ່ຢ່າງຍຸດຕິທຳ. ພວກເຂົາຈະຮັກສາກົດບັນຍັດ ແລະ ກົດຫມາຍຂອງ
ເຮົາ, ແລະ ພວກເຂົາຈະສະຫລອງວັນສະບາໂຕສັກສິດທັງຫລາຍຂອງເຮົາ.
[25]ພວກເຂົາຈະບໍ່ໄປຍັງຄົນຕາຍ ເພື່ອເຮັດຕົວໃຫ້ເປັນມົນທິນ, ເວັ້ນເສຍແຕ່ວ່າ ພໍ່ ຫລື ແມ່, ລູກຊາຍ ຫລື ລູກສາວ, ອ້າຍນ້ອງພີ່ຫລື ເອື້ອຍນ້ອງ
ຜູ້ທີ່ບໍ່ໄດ້ໄປກັບຜູ້ຊາຍ; ນອກນັ້ນ ພວກເຂົາຈະກາຍເປັນມົນທິນໄດ້.[26]ຫລັງຈາກທີ່ປະໂລຫິດ ໄດ້ກາຍເປັນມົນທິນແລ້ວ, ຂະເຈົ້າກໍນັບໄປອີກເຈັດມື້.
[27]ໃນວັນທີ່ຈະເຂົ້າໄປສູ່ເດີ່ນຊັ້ນໃນຂອງສະຖານທີ່ສັກສິດ, ເພື່ອປະຕິບັດຫນ້າທີ່ໃນສະຖານທີ່ສັກສິດຊັ້ນໃນ, ເຂົາຈະຕ້ອງຖວາຍເຄື່ອງບູຊາໄຖ່
ບາບເພື່ອຕົວເອງ — ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.
[28]ນີ້ຈະເປັນມໍລະດົກຂອງພວກເຂົາ: ຄື ເຮົາຈະເປັນມໍລະດົກຂອງປະໂລຫິດ, ແລະ ເຈົ້າຈະບໍ່ຕ້ອງໄດ້ຖືກຳມະສິດໃດໆໃນອິດສະຣາເອນ;
ເພາະເຮົາຈະເປັນກຳມະສິດຂອງພວກເຂົາ.[29]ພວກເຂົາຮັບປະທານອາຫານບູຊາ, ເຄື່ອງບູຊາໄຖ່ຄວາມບາບ, ເຄື່ອງບູຊາໄຖ່ຄວາມຜິດ, ແລະ ທຸກ
ສິ່ງທຸກຢ່າງທີ່ອຸທິດຕົນຕໍ່ພຣະຢາເວໃນອິດສະຣາເອນ, ຈະເປັນຂອງພວກເຂົາ.

[30]ສ່ວນທີ່ດີທີ່ສຸດຂອງຜົນລະປູກແຮກຂອງທຸກສິ່ງທຸກຢ່າງ ແລະ ສ່ວນແບ່ງພິເສດທັງປວງ, ແລະ ສິ່ງອື່ນໆ ຈາກສ່ວນແບ່ງຂອງເຈົ້າທີ່ເຈົ້າໄດ້ຮັບ
ຈະເປັນຂອງບັນດາປະໂລຫິດ, ແລະ ເຈົ້າຈະຖວາຍອາຫານທີ່ດີທີ່ສຸດໃຫ້ແກ່ບັນດາປະໂລຫິດ ເພື່ອວ່າພຣະພອນຈະມີຢູ່ເຫນືອຄອບຄົວຂອງເຈົ້າ.
[31]ບັນດາປະໂລຫິດຈະບໍ່ຮັບປະທານສິ່ງໃດໆ ບໍ່ວ່າຈະເປັນສັດທີ່ຕາຍ ຫລື ຖືກຈີກກັດດ້ວຍສັດປ່າ, ແມ້ວ່າຈະເປັນນົກ ຫລື ສັດຮ້າຍ.

 generated on Tue Jun 17 19:01:42 2025

45 1ເມື່ອເຈົ້າຈັບສະຫລາກເພື່ອແບ່ງແຜ່ນດິນໃຫ້ເປັນມໍລະດົກນັ້ນ, ເຈົ້າຈົ່ງຖວາຍທີ່ດິນສ່ວນຫນຶ່ງແດ່ພຣະຢາເວ;
ຂອງຖວາຍນີ້ຈະເປັນສ່ວນສັກສິດຂອງທີ່ດິ, ຍາວສອງຫມື່ນຫ້າພັນສອກ, ແລະ ກວ້າງຫນຶ່ງຫມື່ນສອກ. ຈະເປັນບ່ອນສັກສິດ, ທົ່ວບໍລິເວນນັ້ນ.
2ຈາກບໍລິເວນນີ້ ພື້ນທີ່ສີ່ຫລ່ຽມຈັດຕຸລັດກວ້າງຍາວດ້ານລະຫ້າຮ້ອຍສອກໂດຍຮອບສຳລັບສະຖານທີ່ບໍຣິສຸດ, ແລະ
ຂອບເຂດໂດຍຮອບກວ້າງອອກມາຫ້າສິບສອກ.

3ຈາກພື້ນທີ່ນີ້ ເຈົ້າຈະຕ້ອງວັດແທກສ່ວນຫນຶ່ງຈາກບໍລິເວນຄວາມຍາວສອງຫມື່ນຫ້າພັນສອກ ແລະ ກວ້າງຫນຶ່ງຫມື່ນສອກ
ຊຶ່ງຈະເປັນພຣະວິຫານ, ຄືສະຖານທີ່ສັກສິດທີ່ສຸດ.4ຈະເປັນສະຖານສັກສິດໃນແຜ່ນນດິນສຳລັບບັນດາປະໂລຫິດ ຜູ້ບົວລະບັດພຣະຢາເວ,
ຜູ້ທີ່ເຂົ້! ມາໃກ້ພຣະຢາເວ ເພື່ອບົວລະບັດພຣະອົງ. ຈະໃຫ້ເປັນບ່ອນສຳລັບບ້ານເຮືອນຂອງບັນດາປະໂລຫິດ ແລະເປັນສະຖານທີ່ສັກສິດ ແລະ
ບໍຣິສຸດ.5ດັ່ງນັ້ນ ຄວາມຍາວສອງຫນຶ່ງຫ້າພັນສອກ ແລະ ຄວາມກວ້າງຫນຶ່ງຫນື່ນສອກ, ແລະ ໃຊ້ເປັນທີ່ຕັ້ງເມືອງຕ່າງໆຂອງຄົນເລວີ
ຜູ້ຊຶ່ງບົວລະບັດໃນພຣະວິຫານ.
6ເຈົ້າຈະຕ້ອງມອບພື້ນທີ່ສຳລັບເມືອງນັ້ນ, ຄວາມກວ້າງຫ້າພັນສອກ ແລະ ຄວາມຍາວສອງຫມື່ນຫ້າພັນສອກ,
ຊຶ່ງຕໍ່ຈາກເຂດສັກສິດທີ່ໄດ້ສະຫງວນໄວ້ ສຳລັບສະຖານທີ່ສັກສິດ; ເມືອງນີ້ ຈະເປັນກຳມະສິດຂອງເຊື້ອສາຍອິດສະຣາເອນທັງຫມົດ.7ແຜ່ນ-
ດິນຂອງບັນດາເຈົ້າເມືອງທີ່ຢູ່ທັງສອງຂ້າງຂອງບໍລິເວນທີ່ສະຫງວນໄວ້ສຳລັບສະຖານທີ່ສັກສິດ ແລະ ເມືອງ. ຊຶ່ງຈະອອກໄປທາງທິດຕາເວັນຕົກ
ແລະ ທິດທາງຕາເວັນອອກ. ຄວາມຍາວທຽບເທົ່າກັບຄວາມຍາວຂອງຫນຶ່ງສ່ວນໃນສ່ວນແບ່ງເຫລົ່ານັ້ນ
ຈາກທາງທິດທາງເວັນຕົກຮອດທິດຕາເວັນອອກ.
8ແຜ່ນດິນນີ້ຈະເປັນກຳມະສິດຂອງເຈົ້າສຳລັບເຈົ້າຊາຍໃນອິດສະຣາເອນ. ແລະ ເຈົ້າຊາຍເຫລົ່ານັ້ນຈະບໍ່ກົດຂີ່ຂົ່ມເຫັງປະຊາຊົນຂອງເຮົາ
ອີກຕໍ່ໄປ; ແຕ່ພວກເຂົາຈະມອບແຜ່ນດິນໃຫ້ຕະກຸນຕ່າງໆຂອງເຊື້ອສາຍອິດສະຣາເອນ.
9ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ໂອ ບັນດາເຈົ້າຊາຍທັງຫລາຍຂອງອິດສະຣາເອນເອີຍ! ຈົ່ງເລີກການທາລຸນ ແລະ ການ-
ກົດຂີ່ຂົ່ມເຫັງເສຍ; ຈົ່ງເຮັດຄວາມຖືກຕອ້ງ ແລະ ຍຸດຕິທຳ! ຈົ່ງເລີກຂັບໄລ່ປະຊາຊົນຂອງເຮົາ! — ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະ-
ຜູ້ເປັນເຈົ້າ.10ເຈົ້າຕ້ອງໃຊ້ຊິງຊັ່ງທີ່ທ່ຽງຕົງເອຟາ ແລະ ບາດທີ່ທ່ຽງທຳ!11ເອຟາ ແລະ ບາດ ຈະມີຈຳນວນເທົ່າກັນ, ສະນັ້ນ ຫນຶ່ງບາດເທົ່າກັບຫນຶ່ງ
ໃນສິບຂອງໂຮເມ; ເອຟາຈະເທົ່າກັບຫນຶ່ງໃນສິບຂອງໂຮເມ. ມາດຕະຖານຂອງການວັດແທກເທົ່າກັບໂຮເມ.12ຫນຶ່ງເຊເຂເທົ່າກັບຊາວຫ້າເຊເຂ;
ຫົກສິບເຊເຂເທົ່າກັບຫນຶ່ງມິເນສຳລັບເຈົ້າ.
13ນີ້ເປັນກຳນົດເຄື່ອງຖວາຍທີ່ເຈົ້າທັງຫລາຍຈະມອບໃຫ້: ຄືສາລີຫນຶ່ງໃນຫົກເອຟາ ຈາກທຸກໆ ຫນຶ່ງໂຮເມ, ແລະ ເຈົ້າຈະມອບເຂົ້າບາເລຫນຶ່ງໃນ
ຫົກເອຟາຈາກທຸກໆ ຫນຶ່ງໂຮເມ.14ແລະສ່ວນວິທີການຖວາຍນ້ຳມັນ ຈະຕວງດ້ວຍຫນ່ວຍບາດ ຄືຫນຶ່ງໃນສິບບາດ ຈາກທຸກຫນຶ່ງໂຄຣະ
(ຄືສິບບາດ) ຫລືທຸກໂຮເມ ເມື່ອຫນຶ່ງໂຮເມ, ກໍຄືສິບບາດຄືກັນ.15ແກະ ຫລື ແບ້ໂຕຫນຶ່ງຈາກຝູງສອງຮ້ອຍໂຕ,
ຈາກແຫລ່ງນ້ຳຂອງອິດສະຣາເອນ ຈະໃຊ້ເປັນເຄື່ອງເຜົາບູຊາ ຫລື ເຄື່ອງເຜົາສັນຕິບູຊາ ເພື່ອລົບລ້າງບາບຂອງປະຊາຊົນ —
ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ.
16ປະຊາຊົນທັງຫມົດແຫ່ງແຜ່ນດິນນີ້ຈະມອບເຄື່ອງຖວາຍພິເສດແກ່ເຈົ້າຊາຍທັງຫລາຍແຫ່ງອິດສະຣາເອນ.17ມັນເປັນຫນ້າທີ່ຂອງເຈົ້າຊາຍທີ່ຈະ
ຈັດຕຽມສັດສຳລັບເຄື່ອງເຜົາບູຊາ, ເຄື່ອງບູຊາພືດຜົນເປັນເມັດ, ແລະ ເຄື່ອງດື່ມບູຊາ ຊຶ່ງໃນງານເທດສະການທັງຫລາຍ ແລະ ໃນວັນຂຶ້ນຫນຶ່ງ
ຄ່ຳ, ແລະ ວັນສະບາໂຕທັງຫລາຍນີ້ຄື — ເທດສະການທີ່ກຳນົດໄວ້ສຳລັບເຊື້ອສາຍອິດສະຣາເອນ. ເຂົາຈັດຕຽມເຄື່ອງບູຊາໄຖ່ບາບ, ເຄື່ອງບູຊາ
ພືດຜົນເປັນເມັດ, ເຄື່ອງເຜົາບູຊາ ແລະ ເຄື່ອງສັນຕິບູຊາ ເພື່ອເຮັດການລົບລ້າງບາບແທນເຊື້ອສາຍອິດສດຣາເອນ.
18ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ໃນວັນທີຫນຶ່ງຂອງເດືອນທີຫນຶ່ງ, ເຈົ້າຈົ່ງເອົາງົວເຖິກປາສະຈາກຕຳນິຈາກຝູງ ແລະ
ມາເຮັດພິທີຖວາຍບູຊາລ້າງບາບ ສຳລັບ ສະຖານນະມັດສະການ.19ບັນດາປະໂລຫິດເອົາເລືອດຂອງເຄື່ອງບູຊາໄຖ່ບາບທາໄວ້ທີ່ເສົາປະຕູພຣະວິ-
ຫານ ແລະ ທີ່ແຈທັງສີ່ຂອງເຂດແດນຂອງແທ່ນບູຊາ, ແລະ ເທິງເສົາປະຕູຂອງເດີ່ນຊັ້ນໃນ.20ເຈົ້າຈະເຮັດຢ່າງນີ້ອີກໃນວັນທີເຈັດຂອງເດືອນນັ້ນ
ເປັນການຊຳລະຄວາມບາບຂອງແຕ່ລະຄົນ ຊຶ່ງເປັນການເຮັດບາບໂດຍບໍ່ເຈດຕະນາ ຫລື ເຈດຕະນາ; ໂດຍວິທີນີ້ເຈົ້າຈະຊຳລະພຣະວິຫານ.
21ໃນວັນທີສິບສີ່ ເດືອນທີຫນຶ່ງ, ຈະມີການຖືເທດສະການ, ເທດສະການເຈັດມື້. ເຈົ້າຈະກິນເຂົ້າຈີ່ບໍ່ມີເຊື້ອແປ້ງ.22ໃນມື້ນັ້ນ, ເຈົ້າຊາຍຈະຈັດຫາ
ງົວເຖິກໂຕຫນຶ່ງສຳລັບຕົນເອງ ແລະ ຕຽມງົວເຖິກສຳລັບປະຊາຊົນທັງຫລາຍຂອງແຜ່ນດິນ ເພື່ອເປັນເຄື່ອງບູຊາໄຖ່ບາບ.
23ສຳລັບເທດສະການໃນມື້ທີ່ເຈັດ, ເຈົ້າຊາຍຈະຈັດຕຽມງົວເຖິກເຈັດໂຕກັບແກະຜູ້ເຈັດໂຕທີ່ປາສະຈາກຕຳນິ ໃຫ້ເປັນເຄື່ອງເຜົາບູຊາແດ່
ພຣະຢາເວໃນທຸກໆມື້ຕະຫລອດເຈັດມື້ນັ້ນ, ແລະ ຈັດຫາແບ້ຜູ້ໂຕຫນຶ່ງທຸກມື້ ໃຫ້ເປັນເຄື່ອງບູຊາໄຖ່ບາບ.24ແລ້ວເຈົ້າຊາຍຈັດຫາອາຫານເຄື່ອງບູ-
ຊາຫນຶ່ງເອຟາຕໍ່ງົວເຖິກໂຕຫນຶ່ງ ແລະ ຫນຶ່ງເອຟາຕໍ່ແກະຜູ້ໂຕຫນຶ່ງ ພ້ອມທັງນ້ຳມັນຫນຶ່ງຮິນຕໍ່ແປ້ງຫນຶ່ງເອຟາ.
25ໃນວັນທີສິບຫ້າຂອງເດືອນທີເຈັດ, ແລະ ໃນເທດສະການງານລ້ຽງນັ້ນ, ເຈົ້າຊາຍຈະເຮັດການຖວາຍຕະຫລອດເຈັດມື້: ຄື ເຄື່ອງບູຊາໄຖ່ບາບ,
ເຄື່ອງເຜົາບູຊາ ແລະ ເຄື່ອງບູຊາພືດຜົນເປັນເມັດ ແລະ ຖວາຍນ້ຳມັນ.

46 [1]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ປະຕູເດີ່ນຊັ້ນໃນ, ປິ່ນຫນ້າໄປທາງທິດຕາເວັນອອກ, ຈະຖືກປິດໄວ້ໃນມື້ທີ່ເຮັດວຽກຫົກ
ວັນ, ແຕ່ໃນວັນສະບາໂຕນັ້ນຈະໃຫ້ເປີດ, ແລະ ໃນວັນຂຶ້ນຫນຶ່ງຄ່ຳກໍໃຫ້ເປີດ.[2]ຝ່າຍເຈົ້າຊາຍນັ້ນຈະເຂົ້າມາເດີ່ນຊັ້ນນອກໂດຍທາງປະຕູ
ແລະ ລະບຽງ ຈາກດ້ານນອກ, ແລະ ລາວຈະມາຢືນຢູ່ຕໍ່ຫນ້າເສົາປະຕູຈາກດ້ານໃນ ຂະນະທີ່ພວກປະໂລຫິດຖວາຍເຄື່ອງເຜົາບູ-
ຊາ ແລະ ເຄື່ອງສັນຕິບູຊາຂອງເຂົາ. ແລ້ວລາວຈະນະມັດສະການຢູ່ທີ່ທາງເຂົ້າປະຕູດ້ານໃນ ແລະ ອອກໄປ, ແຕ່ປະຕູນັ້ນຈະຍັງບໍ່ປິດຈົນກວ່າຈະ
ຮອດຕອນຄ່ຳ.

[3]ປະຊາຊົນແຫ່ງແຜ່ນດິນຈະນະມັດສະການຕໍ່ພຣະພັກພຣະຢາເວຢູ່ທາງເຂົ້າປະຕູນັ້ນ ທັງໃນວັນສະບາໂຕ ແລະ ໃນວັນຂຶ້ນຫນຶ່ງຄ່ຳ.[4]ເຄື່ອງເຜົາ
ບູຊາທີ່ເຈົ້າຊາຍຖວາຍແດ່ພຣະຢາເວໃນວັນສະບາໂຕນັ້ນ ຄື ລູກແກະທີ່ປາສະຈາກຕຳນິຫົກໂຕ ແລະ ແກະຜູ້ປາສະຈາກຕຳນິໂຕຫນຶ່ງ.[5]ເຄື່ອງບູ-
ຊາພືດຜົນເປັນເມັດ ພ້ອມກັບແກະຜູ້ນັ້ນຄືຫນຶ່ງເອຟາ, ແລະ ເຄື່ອງບູຊາພືດຜົນເປັນເມັດພ້ອມກັບລູກແກະນັ້ນ ລາວຢາກຈະຖວາຍ, ແລະ
ນ້ຳມັນຫນຶ່ງຮິນຕໍ່ພືດຜົນແຕ່ລະເອຟາ.
[6]ໃນມື້ຂຶ້ນຫນຶ່ງຄ່ຳ ລາວຈະຖວາຍງົວເຖິກທີ່ປາສະຈາກຕຳນິໂຕຫນຶ່ງຈາກຝູງ, ພ້ອມກັບລູກແກະຫົກໂຕ, ກັບແກະຜູ້ໂຕຫນຶ່ງ ຊຶ່ງລ້ວນຕ້ອງປາສະ-
ຈາກຕຳນິ.[7]ລາວຕ້ອງໄດ້ຖວາຍເຄື່ອງບູຊາພືດຜົນເປັນເມັດນັ້ນຫນຶ່ງເອຟາຕໍ່ງົວເຖິກໂຕນັ້ນ ແລະ ຫນຶ່ງເອຟາຕໍ່ແກະຜູ້ໂຕນັ້ນ, ແລະ
ແຕ່ທີ່ລາວປາຖະຫນາຄືຖວາຍລູກແກະນັ້ນ, ແລະ ຖວາຍນ້ຳມັນຫນຶ່ງຮິນຕໍ່ພືດທຸກໆເອຟາ.[8]ເມື່ອເຈົ້າຊາຍເຂົ້າມາຈາກທາງປະຕູ ແລະ ລະບຽງ,
ລາວຕ້ອງກັບອອກໄປຕາມທາງດຽວກັນນັ້ນຄືເກົ່າ.
[9]ແຕ່ເມື່ອປະຊາຊົນຂອງແຜ່ນດິນເຂົ້າມາຕໍ່ພຣະພັກພຣະຢາເວຢູ່ໃນເທດສະການງານລ້ຽງຕາມກຳນົດ, ຜູ້ທີ່ເຂົ້າມາທາງປະຕູທິດເຫນືອ ເພື່ອນະ-
ມັດສະການຈະຕ້ອງກັບອອກໄປທາງປະຕູທິດໃຕ້; ແລະ ຜູ້ທີ່ເຂົ້າມາທາງປະຕູທິດໃຕ້ ຈະຕ້ອງກັບອອກໄປທາງປະຕູທິດເຫນືອ. ຢ່າໃຫ້ໃຜ
ກັບອອກໄປຕາມທາງປະຕູທີ່ເຂົາເຂົ້າມາ, ເພາະເຂົາຕ້ອງກັບອອກໄປທາງດ້ານກົງກັນຂ້າມກັບທາງທີ່ເຂົ້າມາ.[10]ເຈົ້າຊາຍຈະຢູ່ທ່າມກາງປະຊາຊົນ;
ເມື່ອເຂົາທັງຫມົດເຂົ້າໄປນັ້ນ, ລາວຕ້ອງເຂົ້າໄປ, ເມື່ອປະຊາຊົນອອກໄປນັ້ນ, ລາວກໍຕ້ອງອອກໄປດ້ວຍ.
[11]ໃນເທດສະການງານລ້ຽງ, ເຄື່ອງບູຊາພືດຜົນເປັນເມັດ ຫນຶ່ງເອຟາຕໍ່ກັບງົວເຖິກໂຕຫນຶ່ງ ແລະ ຫນຶ່ງເອຟາຕໍ່ກັບແກະຜູ້ໂຕຫນຶ່ງ, ແລະ
ສິ່ງໃດໆທີ່ລາວປາຖະຫນາຢາກຈະຖວາຍກັບລູກແກະ, ແລະ ນ້ຳມັນຫນຶ່ງຮິນຕໍ່ສຳລັບແຕ່ລະເອຟາ ກໍໃຫ້ຖວາຍ.[12]ເມື່ອເຈົ້າຊາຍຖວາຍເຄື່ອງບູ-
ຊາຕາມໃຈສະຫມັກ, ອາດຈະເປັນເຄື່ອງເຜົາບູຊາ ຫລື ເຄື່ອງສັນຕິບູຊາຕໍ່ພຣະຢາເວ, ປະຕູທີ່ປິ່ນຫນ້າໄປທາງທິດຕາເວັນອອກ
ກໍຈະເປີດອອກໃຫ້ແກ່ລາວ. ລາວຈະຖວາຍເຄື່ອງເຜົາບູຊາ ຫລື ເຄື່ອງສັນຕິບູຊາຂອງເຂົາ ເຫມືອນຢ່າງທີ່ລາວເຮັດໃນວັນສະບາໂຕ. ແລ້ວລາວ
ຈະຕ້ອງອອກໄປ, ແລະ ຫລັງຈາກທີ່ລາວອອກໄປແລ້ວ ປະຕູກໍຈະຖືກປິດ.
[13]ນອກຈາກນີ້, ເຈົ້າຈະຖວາຍລູກແກະໂຕຫນຶ່ງອາຍຸຫນຶ່ງປີ ທີ່ປາສະຈາກຕຳນິເປັນເຄື່ອງເຜົາບູຊາແກ່ພຣະຢາເວປະຈຳວັນ;
ເຈົ້າຈະເຮັດສິ່ງນີ້ທຸກໆເຊົ້າວັນໃຫມ່.[14]ເຈົ້າຈະຖວາຍພືດພັນເປັນເມັດທຸກໆເຊົ້າ, ຫນຶ່ງສ່ວນຫົກຂອງເອຟາ ແລະ ນ້ຳມັນຫນຶ່ງສ່ວນສາມຮິນ ເພື່ອ
ນວດແປ້ງໃຫ້ຊຸ່ມໃຫ້ເປັນເຄື່ອງບູຊາພືດຜົນເປັນເມັດແກ່ພຣະຜູ້ຢາເວ, ນີ້ເປັນລະບຽບຕະຫລອດໄປເປັນນິດ.
[15]ພວກເຂົາຈະຕ້ອງຈັດຫາລູກແກະ, ເຄື່ອງບູຊາພືດຜົນເປັນເມັດ, ແລະ ນ້ຳມັນທຸກໆເຊົ້າ, ເພື່ອເປັນເຄື່ອງເຜົາບູຊາເປັນນິດ.
[16]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ຖ້າເຈົ້າຊາຍຈະມອບຂອງຂວັນໃຫ້ແກ່ລູກຊາຍທັງຫລາຍຂອງຕົນ, ສິ່ງນີ້ກໍຈະເປັນມໍລະດົກ
ຂອງລາວ. ມັນຈະເປັນກຳມະສິດຂອງລູກທັງຫລາຍຂອງລາວ, ມັນເປັນມໍລະດົກ.[17]ແຕ່ຖ້າລາວມອບຂອງຂວັນສ່ວນຫນຶ່ງຈາກມໍລະດົກຂອງລາວ
ມອບໃຫ້ຄົນໃຊ້ຄົນຫນຶ່ງຂອງລາວ, ແລ້ວສ່ວນນັ້ນຈະກາຍເປັນຂອງຄົນໃຊ້ນັ້ນຈົນເຖິງປີແຫ່ງອິດສະຫລະພາບ, ແລ້ວຈາກນັ້ນກໍຈະເອົາມາສົ່ງ
ໃຫ້ເຈົ້າຊາຍຄືນ. ມໍລະດົກຂອງລາວແມ່ນສຳລັບລູກຊາຍທັງຫລາຍຂອງລາວເທົ່ານັ້ນ.[18]ເຈົ້າຊາຍຈະບໍ່ຍຶດສິ່ງໃດຈາກມໍລະດົກຂອງປະຊາຊົນ
ໂດຍບີບຄັ້ນໃຫ້ອອກໄປຈາກສ່ວນທີ່ເປັນກຳມະສິດຂອງເຂົາທັງຫລາຍ; ເຈົ້າຊາຍຈະຕ້ອງມອບສ່ວນທີ່ເປັນກຳມະສິດຂອງຕົນເອງໃຫ້ເປັນມໍລະ-
ດົກແກ່ລູກຊາຍທັງຫລາຍຂອງລາວ ເພື່ອວ່າປະຊາຊົນຈະບໍ່ກະຈັດກະຈາຍ,  ທີ່ຕ້ອງຖືກຂັບໄລ່ຈາກສ່ວນທີ່ເປັນກຳມະສິດຂອງຕົນ.'"
[19]ແລ້ວຊາຍຄົນນັ້ນກໍນຳຂ້ານ້ອຍມາຕາມທາງເຂົ້າທີ່ປະຕູ ເພື່ອມາຍັງຫ້ອງບໍຣິສຸດສຳລັບປະໂລຫິດ, ຊຶ່ງປິ່ນຫນ້າໄປທາງທິດເຫນືອ ແລະ ເບິ່ງແມ໋!
ໃນບ່ອນນັ້ນ ຂ້ານ້ອຍເຫັນທີ່ຫນຶ່ງຢູ່ທາງທິດຕາເວັນຕົກ.[20]ຊົງກ່າວແກ່ຂ້ານ້ອຍວ່າ, "ນີ້ເປັນສະຖານທີ່ຊຶ່ງປະໂລຫິດຈະໃຊ້ຕົ້ມເຄື່ອງບູຊາໄຖ່ບາບ,
ຄວາມຜິດ ແລະເຄື່ອງບູຊາໄຖ່ບາບ ແລະ ເປັນບ່ອນທີ່ເຂົາອົບເຄື່ອງບູຊາພືດຜົນເປັນເມັດ. ພວກເຂົາບໍ່ສາມາດນຳເຄື່ອງບູຊາໄປຍັງເດີ່ນຊັ້ນນອກ,
ເພີ່ນບອກວ່າ ປະຊາຊົນຈະຕ້ອງໄດ້ຮັບການຊຳລະໃຫ້ສະອາດ."
[21]ແລ້ວເຂົາຈຶ່ງນຳຂ້ານ້ອຍອອກມາທີ່ເດີ່ນຊັ້ນນອກ ແລະ ພາຂ້ານ້ອຍຜ່ານໄປກາຍແຈທັງສີ່ຂອງເດີ່ນນັ້ນ, ແລະ ຂ້ານ້ອຍໄດ້ເຫັນວ່າ
ໃນແຕ່ລະແຈຂອງເດີ່ນກໍມີເດີ່ນອີກເດີ່ນຫນຶ່ງ.[22]ໃນແຈທັງສີ່ຂອງເດີ່ນຊັ້ນນອກ ມີເດີ່ນນ້ອຍໆສີ່ເດີ່ນ, ຍາວສີ່ສິບສອກ ແລະ ກວ້າງສາມສິບສອກ.
ເດີ່ນທັງສີ່ມີຂະຫນາດດຽວກັນທັງສີ່ເດີ່ນ.[23]ມີແຖວຫີນອ້ອມຮອບເດີ່ນນ້ອຍທັງສີ່ນັ້ນ, ແລະ ມີເຕົາແຕ່ງອາຫານຢູ່ດ້ານລຸ່ມຂອງແຖວຫີນນັ້ນ.
[24]ແລ້ວຊາຍຄົນນັ້ນໄດ້ກ່າວແກ່ຂ້ານ້ອຍວ່າ. "ສະຖານທີ່ເຫລົ່ານີ້ເປັນບ່ອນທີ່ຄົນຮັບໃຊ້ໃນພຣະວິຫານ ຈະໃຊ້ຕົ້ມເຄື່ອງບູຊາທີ່ປະຊາ-
ຊົນຈະຖວາຍ."

47 [1]ຫລັງຈາກນັ້ນ ຊາຍຄົນນັ້ນກໍນຳຂ້ານ້ອຍກັບມາທີ່ປະຕູທາງເຂົ້າພຣະວິຫານ, ແລະ ທີ່ມີນ້ຳໄຫລອອກມາຈາກກ້ອງທາງເຂົ້າປະຕູພຣະວິ-
ຫານໄປທາງທິດຕາເວັນອອກ — ເພາະດ້ານຫນ້າຂອງພຣະວິຫານປິ່ນຫນ້າໄປທາງທິດຕາເວັນອອກ — ແລະ ນ້ຳໄຫລລົງມາຈາກຂ້າງ
ລຸ່ມທາງທິດໃຕ້ຂອງພຣະວິຫານ, ຄືດ້ານຂວາຂອງແທ່ນບູຊາ.[2]ດັ່ງນັ້ນ ເຂົາໄດ້ນຳຂ້ານ້ອຍອອກມາທາງປະຕູດ້ານເຫນືອ ແລະ ນຳຂ້ານ້ອຍອ້ອມ-
ໄປພາຍນອກເຖິງປະຕູຊັ້ນນອກ ຊຶ່ງປິ່ນຫນ້າໄປທາງຕາເວັນອອກ, ແລະ ທີ່ນ້ຳນັ້ນໄຫລອອກມາຈາກປະຕູທາງທິດໃຕ້.

[3]ຊາຍຜູ້ນັ້ນໄດ້ໄປທາງຕາເວັນອອກ, ມີເຊືອກວັດແທກຢູ່ໃນມືຂອງເຂົາ; ເຂົາວັດແທກໄດ້ຫນຶ່ງພັນສອກ ແລະ ນຳຂ້ານ້ອຍລຸຍນ້ຳໄປພຽງຂໍ້ຂາ.
[4]ແລ້ວເຂົາກໍວັດແທກອີກຫນຶ່ງພັນສອກອີກເທື່ອຫນຶ່ງ ແລະ ນຳຂ້ານ້ອຍລຸຍນ້ຳໄປເລິກພຽງຫົວເຂົ່າ; ແລະ ເຂົາກໍວັດແທກໄດ້ອີກຫນຶ່ງພັນສອກ
ແລະ ນຳຂ້ານ້ອຍລຸຍນ້ຳໄປ ເລິກພຽງແອວ.[5]ຫລັງຈາກນັ້ນ ເຂົາກໍວັດແທກໄດ້ອີກຫນຶ່ງພັນສອກ, ແຕ່ເປັນແມ່ນ້ຳທີ່ຂ້ານ້ອຍລຸຍຂ້າມບໍ່ໄດ້ ເພາະ
ນ້ຳນັ້ນຂຶ້ນແລ້ວ ແລະ ເລິກພໍທີ່ຈະລອຍໄປໄດ້ — ມັນເປັນແມ່ນ້ຳທີ່ລຸຍຂ້າມບໍ່ໄດ້.
[6]ຊາຍຄົນນັ້ນເວົ້າກັບຂ້ານ້ອຍວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນສິ່ງນີ້ບໍ?” ແລ້ວເຂົາກໍພາຂ້ານ້ອຍອອກມາ ແລະ ໃຫ້ຂ້ານ້ອຍຍ່າງກັບມາຕາມ
ຝັ່ງແມ່ນ້ຳ.[7]ຂະນະທີ່ຂ້ານ້ອຍກັບມາ, ຕາມແຄມນ້ຳມີຕົ້ນໄມ້ຢ່າງຫລວງຫລາຍຢູ່ທີ່ຝັ່ງແມ່ນ້ຳທັງສອງຟາກ.[8]ຊາຍຄົນນັ້ນເວົ້າກັບຂ້ານ້ອຍວ່າ, “ນ້ຳ
ນີ້ໄຫລໄປທາງບໍລິເວນເຂດຕາເວັນອອກ ແລະ ໄຫລລົງໄປເຖິງອາຣາບາ; ແລ້ວນ້ຳນີ້ກໍໄດ້ໄຫລລົງໄປເຖິງທະເລເກືອ ແລະ ກໍຈະເຮັດໃຫ້ນ້ຳຈືດ.
[9]ສິ່ງທີ່ມີຊີວິດທຸກຢ່າງທີ່ຢູ່ກັນເປັນຝູງ ກໍຈະມີຊີວິດຢູ່ໄດ້ ເມື່ອແມ່ນ້ຳໄຫລຜ່ານໄປເຖິງທີ່ໃດ; ທີ່ນັ້ນຈະມີປາຢ່າງຫລວງຫລາຍ,
ເພາະວ່າສາຍນ້ຳໄຫລຜ່ານໄປທີ່ນັ້ນ. ມັນຈະເຮັດໃຫ້ນ້ຳເຄັມຈືດ. ສາຍນ້ຳໄຫລຜ່ານໄປເຖິງບ່ອນໃດ ສິ່ງທີ່ມີຊີວິດທຸກຢ່າງກໍຈະມີຊີວິດຢູ່ໄດ້.
[10]ແລ້ວສິ່ງນີ້ກໍຈະເກີດຂຶ້ນວ່າ ພວກຊາວຫາປາຈາກເອັນເກດີ ຈະຢືນຢູ່ທີ່ຂ້າງແມ່ນ້ຳ, ແລະ ໃນທີ່ນັ້ນຈະມີສະຖານທີ່ສຳລັບຕາກແຫເຖິງເອັນເອັກ-
ລາຢິມ. ຢູ່ທີ່ນັ້ນຈະມີປາຫລາຍຊະນິດໃນທະເລເກືອ, ເຫມືອນກັບປາໃນທະເລໃຫຍ່ ເພື່ອຄວາມອຸດົມສົມບູນຂອງມັນ.
[11]ແຕ່ບ່ອນທີ່ເປັນບຶງ ແລະ ຫນອງນ້ຳຂອງທະເລເກືອຈະບໍ່ຖືກເຮັດໃຫ້ຈືດ; ມັນຍັງຈະເປັນເກືອຢູ່.[12]ນອກຈາກນີ້ ຕາມຝັ່ງທັງສອງຟາກຂອງແມ່ນ້ຳ,
ຈະມີຕົ້ນໄມ້ທຸກຊະນິດທີ່ປູກເປັນອາຫານ. ໃບຂອງມັນຫລາຍຈະບໍ່ຫ່ຽວ ແລະ ຫມາກຂອງມັນຈະບໍ່ຫລົ່ນຈັກເທື່ອ. ແຕ່ລະເດືອນ, ຕົ້ນຈະເກີດ
ຫມາກໃຫມ່ເລື້ອຍໆ, ເພາະວ່ານ້ຳໄຫລຈາກສະຖານທີ່ສັກສິດມາຍັງຕົ້ນໄມ້ເຫລົ່ານັ້ນ. ຜົນຂອງຫມາກໄມ້ນັ້ນຈະໃຊ້ເປັນອາຫານ, ແລະ
ໃບຂອງມັນກໍໃຊ້ຮັກສາພະຍາດ.
[13]ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ: ນີ້ຈະເປັນວິທີທີ່ເຈົ້າຈະແບ່ງເຂດແດນໃຫ້ອິດສະຣາເອນທັງສິບສອງເຜົ່າ: ໂຢເຊັບຈະໄດ້ສອງ
ສ່ວນ.[14]ແລະພວກເຈົ້າຈົ່ງແບ່ງໃຫ້ເທົ່າໆກັນ ຢ່າງທີ່ເຮົາໄດ້ຍົກມືປະຕິຍານແລ້ວວ່າ ຈະມອບໃຫ້ແກ່ບັນພະບູລຸດຂອງເຈົ້າ. ແຜ່ນດິນນີ້ຈະຕົກເປັນ
ມໍລະດົກຂອງພວກເຈົ້າ.
[15]ນີ້ຈະເປັນເຂດແດນຂອງແຜ່ນດິນນີ້ ທາງທິດເຫນືອຈາກທະເລໃຫຍ່ໄປຕາມທາງເມືອງເຮດໂລນ, ແລະ ຕໍ່ໄປຮອດເມືອງເຊດາດ.
[16]ແລ້ວເຂດແດນຈະໄປຍັງເມືອງເບໂຣທາ, ເຖິງເມືອງຊິບຣາອິມ, ຊຶ່ງຢູ່ລະຫວ່າງເຂດແດນເມືອງດາມັສກັດ ແລະ ເຂດແດນເມືອງຮາມັດ, ແລະ
ຮອດເມືອງຮາເຊີ-ຮັດຕີໂກນ, ຊຶ່ງຢູ່ທີ່ເຂດແດນເມືອງຮາອູຣານ.[17]ດັ່ງນັ້ນ ເຂດແດນຈະຍາວຈາກທະເລເຖິງເມືອງຮາຊາ-ເອໂນນ ຊຶ່ງຢູ່ທີ່ເຂດແດນ
ທາງເຫນືອຂອງເມືອງດາມັສກັດ ແລະ ເມືອງຮາມັດທາງທິດເຫນືອ. ອັນນີ້ເປັນເຂດພາກເຫນືອ.
[18]ທາງດ້ານຕາເວັນອອກ, ລະຫວ່າງເມືອງຮາອູຣານ ແລະ ດາມັສກັດ ແລະ ລະຫວ່າງກີເລອາດ ແລະ ແຜ່ນດິນອິດສະຣາເອນ ກໍຈະເປັນແມ່ນ້ຳ
ຈໍແດນ. ເຈົ້າຕ້ອງວັດແທກຈາກເຂດນີ້ເຖິງຟາກທະເລຕາເວັນອອກ; ທັງຫມົດນີ້ຈະເປັນເຂດແດນທາງດ້ານຕາເວັນອອກ.[19]ແລ້ວທາງທິດໃຕ້:
ທາງທິດໃຕ້ຂອງຕາມາ ຈົນຮອດນ້ຳເມຣິບາຄາເດັດ, ເລື້ອຍໄປຕາມແມ່ນ້ຳເອຢິບເຖິງທະເລໃຫຍ່, ແລະ ທາງທິດໃຕ້ນີ້ເປັນເຂດແດນໄປທາງ
ທິດໃຕ້.[20]ເຂດແດນທາງທິດຕາເວັນຕົກຈະເປັນທະເລໃຫຍ່ ຊຶ່ງເລື້ອຍໄປຈົນຮອດບ່ອນທີ່ຢູ່ກົງກັນຂ້າມກັບເມືອງຮາມັດ. ອັນນີ້ເປັນເຂດແດນທາງ
ຕາເວັນຕົກ.
[21]ນີ້ຄືວິທີທີ່ຈະແບ່ງແຜ່ນດິນນີ້ ສຳລັບພວກເຂົາ, ສຳລັບເຜົ່າຕ່າງໆຂອງອິດສະຣາເອນ.[22]ເພື່ອເຈົ້າຈະແບ່ງສ່ວນທີ່ເປັນມໍລະດົກ
ໃຫ້ກັບພວກເຈົ້າເອງ ແລະ ທັງໃຫ້ກັບພວກຄົນຕ່າງດ້າວທີ່ອາໄສຢູ່ທ່າມກາງພວກເຈົ້າ, ຄືຄົນທັງຫລາຍທີ່ໄດ້ເກີດລູກຫລານຢູ່ທ່າມກາງເຈົ້າ ແລະ
ອາໄສຢູ່ນຳ, ເຫມືອນກັບຄົນອິດສະຣາເອນໂດຍກຳເນີດ. ເຈົ້າຈະໂຍນມໍລະດົກຢ່າງຫລວງຫລາຍທ່າມກາງຊົນເຜົ່າອິດສະຣາເອນ.
[23]ແລ້ວຄົນຕ່າງຊາດກໍຈະອາໄສຢູ່ທ່າມກາງບັນດາຊົນເຜົ່າຕ່າງໆຜູ້ທີ່ອາໄສຢູ່. ເຈົ້າຕ້ອງມອບມໍລະດົກແກ່ເຂົາ —
ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ."

 generated on Tue Jun 17 19:01:42 2025

48 1ຕໍ່ໄປນີ້ເປັນຊື່ຂອງບັນດາເຜົ່າຕ່າງໆ. ເຜົ່າດານຈະໄດ້ຮັບສ່ວນແບ່ງຂອງດິນແດນຫນຶ່ງສ່ວນ; ບໍລິເວນເຂດແດນທາງເຫນືອ
ຂອງອິດສະຣາເອນໄປຕາມທາງເຮດໂລນ ແລະ ຮອດທາງເຂົ້າເມືອງເລໂບຮາມັດ. ເຂດແດນນີ້ຈະໄປອອກໄປຈົນເຖິງຮາຊາ-ເອໂນນ ແລະ
ໄປຕາມຊາຍແດນຂອງດາມັສກັດ ຊຶ່ງຢູ່ເຂດແດນທາງເຫນືອ ແລະ ຈົນເຖິງເມືອງຮາມັດ. ເຂດແດນຂອງດານຈະເລີ່ມແຕ່ທາງທິດຕາເວັນຕົກ
ອອກ ໄປເຖິງທາງໄປທະເລໃຫຍ່. 2ຕິດກັບເຂດແດນຂອງດານ, ເລີ່ມຈາກທາງຕາເວັນອອກໄປຮອດທາງຕາເວັນຕົກ, ເຜົ່າອາເຊຈະໄດ້ສ່ວນຫນຶ່ງ.
3ຕິດກັບເຂດແດນຂອງອາເຊ ເລີ່ມຈາກທາງທິດຕາເວັນອອກໄປຮອດທາງທິດຕາເວັນຕົກ, ເຜົ່ານັບທາລີຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ.

4ທີ່ຢູ່ຕິດກັບເຂດແດນຂອງນັບທາລີ ເລີ່ມຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ, ເຜົ່າມານາເຊຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 5ທີ່ຢູ່ຕິດກັບ
ເຂດແດນຂອງມານາເຊ ເລີ່ມຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ, ເຜົ່າເອຟຣາອິມຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 6ທີ່ຢູ່ຕິດກັບເຂດແດນ
ເອຟຣາອິມ ເລີ່ມຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ, ເຜົ່າຣູເບັນຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 7ທີ່ຢູ່ຕິດກັບເຂດແດນຣູເບັນ
ເລີ່ມຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ, ເຜົ່າຢູດາຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ.
8ການຖວາຍເຄື່ອງບູຊາຂອງແຜ່ນດິນທີ່ເຈົ້າຈະເຮັດແມ່ນຕາມເຂດແດນ ເຜົ່າຢູດາ ແລະ
ກາຍອອກໄປຈາກທິດຕາເວັນອອກຈົນເຖິງທິດຕາເວັນຕົກ; ມັນຈະກວ້າງສອງຫມື່ນຫ້າພັນສອກ. ຄວາມຍາວ
ຈະຕ້ອງສອດຄ່ອງກັບສັດສ່ວນຂອງເຜົ່າອື່ນຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ, ແລະ ພຣະວິຫານຈະຢູ່ທາງກາງ.
9ດິນແດນນີ້ທີ່ເຈົ້າຕ້ອງຖວາຍແດ່ພຣະຢາເວ ຈະຍາວສອງຫມື່ນຫ້າພັນສອກ ແລະ ຄວາມກວ້າງຫນຶ່ງຫມື່ນສອກ.
10ຕໍ່ໄປນີ້ຈະເປັນສ່ວນແບ່ງຂອງສັດສ່ວນທີ່ບໍຣິສຸດຂອງດິນແດນນີ້: ປະໂລຫິດຈະໄດ້ສ່ວນແບ່ງທາງທິດເຫນືອ ຍາວສອງຫມື່ນຫ້າພັນສອກ; ທາງ
ທິດຕາເວັນຕົກກວ້າງຫນຶ່ງຫມື່ນສອກ; ທາງທິດຕາເວັນອອກກວ້າງຫນຶ່ງຫມື່ນສອກ; ແລະ ທາງທິດໃຕ້ຍາວສອງຫມື່ນຫ້າພັນສອກ, ມີສະ-
ຖານນະມັດສະການຂອງພຣະຢາເວທີ່ຢູ່ທາງກາງ. 11ທີ່ສ່ວນນີ້ມອບແກ່ປະໂລຫິດເຊື້ອສາຍຂອງຊາໂດກທີ່ຊໍາຣະໃຫ້ບໍຣິສຸດ,
ຜູ້ຊຶ່ງໄດ້ບົວລະບັດເຮົາຢ່າງສັດຊື່ສະເຫມີມາ ແລະ ບໍ່ໄດ້ຫລົງຜິດໄປເຫມືອນດັ່ງຄົນອິດສະຣາເອນໄດ້ຫລົງຜິດໄປ,
ເຫມືອນຢ່າງຄົນເລວີໄດ້ຫລົງໄປ. 12ການຖວາຍຂອງພວກເຂົາຈະເປັນສ່ວນຫນຶ່ງຂອງສ່ວນແບ່ງທີ່ບໍຣິສຸດທີ່ສຸດໃນແຜ່ນດິນນີ້,
ຊຶ່ງກວ້າງອອກໄປເຖິງເຂດແດນຂອງຄົນເລວີ.
13ດິນແດນສ່ວນຂອງຄົນເລວີໃກ້ກັບເຂດແດນຂອງປະໂລຫິດນັ້ນ ຍາວສອງຫມື່ນຫ້າພັນສອກ ແລະ ກວ້າງຫນຶ່ງຫມື່ນສອກ. ຄວາມຍາວທັງ
ຫມົດຂອງທີ່ດິນທັງສອງຈະຍາວສອງຫມື່ນຫ້າພັນສອກ ແລະ ຄວາມກວ້າງສອງຫມື່ນສອກ. 14ພວກເຂົາຈະຕ້ອງບໍ່ຂາຍ ຫລື
ແລກປ່ຽນສ່ວນຫນຶ່ງສ່ວນໃດຂອງດິນສ່ວນນີ້; ທີ່ດິນສ່ວນທີ່ດີທີ່ສຸດຂອງອິດສະຣາເອນ ຕ້ອງບໍ່ຖືກແບ່ງແຍກຈາກບໍລິເວນເດີມເຫລົ່ານີ້,
ເພາະເປັນທີ່ບໍຣິສຸດແດ່ພຣະຢາເວ.
15ສ່ວນດິນທີ່ຍັງເຫລືອ, ກວ້າງຫ້າພັນສອກ ແລະ ຍາວສອງຫມື່ນຫ້າພັນສອກນັ້ນ ຈະເປັນທີ່ສາທາລະນະປະໂຫຍດຂອງເມືອງ, ເປັນທີ່ຢູ່ອາໄສ,
ແລະ ເປັນທົ່ງຫຍ້າ; ຕົວເມືອງຈະຢູ່ທາງກາງ. 16ຕໍ່ໄປນີ້ເປັນຂະຫນາດຂອງດ້ານຕ່າງໆຂອງເມືອງຄື: ທາງທິດເຫນືອມີຄວາມຍາວ 4,500 ສອກ;
ທາງທິດໃຕ້ມີຄວາມຍາວ 4,500 ສອກ; ທາງທິດຕາເວັນອອກມີຄວາມຍາວ 4,500 ສອກ; ແລະ ທາງທິດຕາເວັນຕົກມີຄວາມຍາວ 4,500
ສອກ.
17ບໍລິເວນທົ່ງຫຍ້າຂອງເມືອງນັ້ນ ໂດຍວັດແທກຈາກທິດເຫນືອ, ອອກໄປມີຄວາມເລິກ 250 ສອກ; ທິດໃຕ້ມີຄວາມເລິກ 250 ສອກ, ທິດຕາເວັນ-
ອອກ, ມີຄວາມເລິກ 250 ສອກ, ແລະ ທິດຕາເວັນຕົກ, ມີຄວາມເລິກ 250 ສອກ. 18ສ່ວນທີ່ເຫລືອທີ່ບໍຣິສຸດນັ້ນ
ຂອງຖວາຍຈະຂະຫນາຍອອກໄປທາງທິດຕາເວັນອອກຫນຶ່ງຫມື່ນສອກ ແລະ ຫນຶ່ງຫມື່ນສອກໄປທາງທິດຕາເວັນຕົກ.
ມັນຈະແຜ່ກວ້າງອອກໄປຕາມເຂດຂອງເຄື່ອງຖວາຍບໍຣິສຸດ, ແລະ ພືດຜົນຈະເປັນອາຫານຂອງຄົນທີ່ເຮັດວຽກໃນເມືອງນັ້ນ.
19ປະຊາຊົນຜູ້ທີ່ເຮັດວຽກໃນເມືອງນັ້ນ, ປະຊາຊົນທັງຫລາຍທີ່ມາຈາກເຜົ່າທັງຫລາຍຂອງອິດສະຣາເອນ,
ຈະເປັນຄົນເຮັດໄຮ່ເຮັດນາໃນດິນຜືນນີ້. 20ການຖວາຍດິນແດນຈະວັດແທກໄດ້ເປັນຄວາມຍາວດ້ານລະສອງຫມື່ນຫ້າພັນສອກ,
ກວ້າງດ້ານລະສອງຫມື່ນຫ້າພັນສອກ. ດ້ວຍວິທີນີ້ພວກເຈົ້າຈະແບ່ງກັນໄວ້ເປັນສ່ວນສັກສິດບໍຣິສຸດ ພ້ອມກັບດິນແດນຂອງເມືອງນີ້ດ້ວຍ.
21ສ່ວນທີ່ເຫລືອຂອງແຜ່ນດິນທັງສອງດ້ານຂອງການຖວາຍບູຊາອັນສັກສິດ ແລະ ເຂດເມືອງ ຈະເປັນຂອງເຈົ້າຊາຍ.
ອະນາເຂດຂອງເຈົ້າຊາຍທາງທິດຕາເວັນອອກຈະແຜ່ກວ້າງອອກໄປສອງຫມື່ນຫ້າພັນສອກ ຈາກເຂດແດນຂອງສ່ວນບໍຣິສຸດ
ໄປເຖິງເຂດແດນທາງທິດຕາເວັນອອກ — ແລະ ພື້ນທີ່ຂອງເຂົາໄປທາງທິດຕາເວັນຕົກຈະແຜ່ກວ້າງອອກໄປຍາວສອງຫມື່ນຫ້າພັນ
ສອກໄປທາງທິດຕາເວັນຕົກ. ໃຈກາງຈະເປັນສ່ວນຖວາຍບໍຣິສຸດ, ແລະ ສະຖານບໍຣິສຸດຂອງພຣະວິຫານຈະຢູ່ທາງກາງນັ້ນ.
22ແຜ່ນດິນແຜ່ກວ້າງອອກຈາກກໍາມະສິດຂອງຄົນເລວີ ແລະບໍລິເວນເມືອງ ຊຶ່ງຢູ່ທ່າມກາງນັ້ນ ຈະເປັນດິນແດນຂອງເຈົ້າຊາຍ; ມັນຈະຢູ່ລະຫວ່າງ
ເຂດແດນຂອງຢູດາ ແລະ ເຂດແດນຂອງເບັນຢາມິນ — ແຜ່ນດິນນີ້ຈະເປັນຂອງເຈົ້າຊາຍ.
23ສ່ວນເຜົ່າທີ່ເຫລືອຢູ່ນັ້ນ, ສ່ວນແບ່ງຂອງພວກເຂົາຈະມາຈາກທາງຝັ່ງຕາເວັນອອກ ແລະ ໄປທາງຝັ່ງທິດຕາເວັນຕົກ. ເຜົ່າເບັນຢາ-
ມິນຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 24ທີ່ຢູ່ຕິດກັບເຂດແດນຂອງເບັນຢາມິນ ເລີ່ມຈາກທາງທິດຕາເວັນອອກໄປຮອດທິດຕາເວັນຕົກ, ເຜົ່າຊີເມ-
ໂອນຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 25ທີ່ຢູ່ຕິດກັບເຂດແດນຂອງຊີເມໂອນ ເລີ່ມຈາກທິດຕາເວັນອອກ ໄປຮອດທິດຕາເວັນຕົກ, ເຜົ່າອິດຊາ-
ຄາຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ. 26ທີ່ຢູ່ຕິດກັບເຂດແດນຂອງອິດຊາຄາ ເລີ່ມຈາກທິດຕາເວັນອອກ ໄປຮອດທິດຕາເວັນຕົກ, ເຜົ່າເຊບູໂ-
ລນຈະໄດ້ຮັບສ່ວນແບ່ງຫນຶ່ງສ່ວນ.
27ໄປທາງໃຕ້ຂອງເຂດແດນເຊບູໂລນ, ເລີ່ມຈາກທິດຕາເວັນອອກ ໄປຮອດທິດຕາເວັນຕົກ, ເປັນສ່ວນແບ່ງຂອງເຜົ່າກາດ — ຫນຶ່ງສ່ວນ. 28ທີ່ຢູ່ຕິດ
ກັບເຂດແດນຂອງກາດ ທາງທິດໃຕ້ເຂດແດນນັ້ນຈະແຜ່ກວ້າງອອກໄປຈາກເມືອງຕາມາເຖິງນ້ຳຄາເດັດ, ແລະ ໄກອອກໄປຕາມແມ່ນ້ຳ
ຂອງເອຢິບ, ແລະ ເຖິງທະເລໃຫຍ່. 29ນີ້ເປັນດິນແດນ ຊຶ່ງພວກເຈົ້າຈະແບ່ງໃຫ້ເຜົ່າຕ່າງໆ;
ມັນຈະເປັນມໍລະດົກຂອງເຜົ່າຕ່າງໆຂອງອິດສະຣາເອນ. ນີ້ຈະເປັນສ່ວນແບ່ງຂອງພວກເຂົາທັງຫລາຍ.
ນີ້ເປັນຄໍາປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.


generated on Tue Jun 17 19:01:42 2025

30ຕໍ່ໄປນີ້ເປັນທາງອອກຂອງເມືອງ: ທາງທິດເຫນືອ, ຊຶ່ງຈະວັດແທກ ຄວາມຍາວໄດ້ 4,500 ສອກ,31ມີປະຕູສາມປະຕູບານ, ຕັ້ງຊື່ຕາມຊື່
ເຜົ່າທັງຫລາຍຂອງຄົນອິດສະຣາເອນ: ປະຕູຫນຶ່ງຊື່ຣູເບັນ, ປະຕູຫນຶ່ງຊື່ຢູດາ, ແລະ ປະຕູຊື່ເລວີ.32ທາງທິດຕາເວັນອອກ, ຊຶ່ງວັດແທກຄວາມ
ຍາວໄດ້ 4,500 ສອກ, ຈະມີປະຕູສາມບານຄື: ປະຕູຫນຶ່ງຊື່ໂຢເຊັບ, ປະຕູຫນຶ່ງຊື່ເບັນຢາມິນ ແລະ ປະຕູຫນຶ່ງຊື່ດານ.
33ທາງທິດຕາເວັນອອກ, ຊຶ່ງວັດແທກຄວາມຍາວໄດ້ 4,500 ສອກ, ຈະມີປະຕູສາມບານຄື: ປະຕູຫນຶ່ງຊື່ຊີເມໂອ, ປະຕູຫນຶ່ງຊື່ອິດຊາຄາ, ແລະ
ປະຕູຫນຶ່ງຊື່ເຊບູໂລນ.34ທາງທິດຕາເວັນອອກ, ຊຶ່ງວັດແທກຄວາມຍາວໄດ້ 4,500 ສອກ, ຈະມີປະຕູສາມບານຄື: ປະຕູຫນຶ່ງຊື່ກາດ, ປະຕູຫນຶ່ງຊື່
ອາເຊ, ແລະ ປະຕູຫນຶ່ງຊື່ນັບທາລີ.35ໄລຍະທາງຮອບເມືອງນັ້ນ ຈະມີຫນຶ່ງຫມື່ນແປດພັນສອກ; ຕັ້ງແຕ່ວັນນີ້ໄປ, ເມືອງນີ້ຈະມີຊື່ວ່າ
"ພຣະຢາເວສະຖິດທີ່ນັ້ນ."

# ດານີເອນ

1 1ໃນປີທີສາມທີ່ເຢໂຮຍອາກິມໄດ້ເປັນກະສັດແຫ່ງຢູດາຍ, ເນບູກາດເນັດຊາ ກະສັດບາບີໂລນໄດ້ສະເດັດມາຍັງເມືອງເຢຣູຊາເລັມ ແລະ
ຊຶ່ງລ້ອມເມືອງໄວ້ ເພື່ອເປັນການຕັດສະບຽງທັງຫມົດທີ່ຈະຜ່ານເຂົ້າໃນເມືອງ.2ອົງພຣະຜູ້ເປັນເຈົ້າໄດ້ໃຫ້ໄຊຊະນະແກ່ເນບູກາດເນັດຊາ
ເຫນືອເຢໂຮຍອາກິມກະສັດແຫ່ງຢູດາ, ແລະພຣະອົງໄດ້ມອບວັດຖຸສັກສິດບາງອັນຈາກວິຫານຂອງພຣະເຈົ້າ.
ພຣະອົງຊົງວາງວັດຖຸເຫລົ່ານັ້ນໄວ້ໃນດິນແດນແຫ່ງບາບີໂລນ, ໄວ້ໃນວິຫານຂອງພຣະເຈົ້າຂອງພຣະອົງ,
ແລະພຣະອົງໄດ້ມອບວາງວັດຖຸສັກສິດໄວ້ໃນຄັງຂອງພຣະເຈົ້າ.

3ກະສັດໄດ້ສັ່ງອັດສະເປນັດ, ຜູ້ເປັນຫົວຫນ້າຂອງບັນດາຂ້າຣາຊການ, ເພື່ອນຳເອົາຄົນອິດສາຣະເອນຈຳນວນຫນຶ່ງ, ທັງເຊື້ອພະວົງ
ແລະເຊື້ອສາຍຂຸນນາງ -4ພວກຊາຍຫນຸ່ມໆທີ່ປາສະຈາກຄຳຕຳຫນິ, ມີຮູບຮ່າງຫນ້າຕາດີ, ຊ່ຽວຊານທາງດ້ານສະຕິປັນຍາທັງຫມົດ,
ມີຄວາມຮູ້ຄວາມເຂົ້າໃຈ ແລະ ຄວາມສາມາດທີ່ຈະຮັບໃຊ້ໃນຣາຊວັງຂອງກະສັດ. ພະອົງຊົງໃຫ້ສອນວັນນະຄະດີ ແລະ
ພາສາຂອງບາບີໂລນແກ່ພວກເຂົາ.5ກະສັດໄດ້ຊົງກຳນົດອາຫານປານີດສູງ ແລະ ເຫລົ້າອະງຸ່ນຊຶ່ງກະສັດໄດ້ດື່ມນັ້ນ ໃຫ້ແກ່ພວກເຂົາທຸກມື້.
ພວກຄົນຫນຸ່ມເຫລົ່ານັ້ນໄດ້ຮັບການຝຶກຝົນຢູ່ສາມປີ, ແລະຫລັງຈາກທີ່ຄົບກຳນົດເວລາແລ້ວນັ້ນ, ພວກເຂົາກໍໄດ້ຮັບໃຊ້ກະສັດ.
6ໃນບັນດາຄົນເຫລົ່ານັ້ນມີຄົນດານີແອນ, ຮານານີຢາ, ມີຊາເອນ, ແລະ ອາຊາລີຢາ, ມີຊາເອນ, ແລະ ອາຊາລີຢາ, ແລະ
ປະຊາຊົນຄົນອື່ນໆຂອງຢູດາ.7ຫົວຫນ້າເຈົ້າຫນ້າທີ່ ໄດ້ຕັ້ງຊື່ໃຫມ່ໃຫ້ພວກເຂົາ: ດານີແອນໄດ້ເອີ້ນວ່າ ເບັນເຕຊັດຊາເຣ, ຮານານີຢາເອີ້ນວ່າ
ຊັດຣາກ, ມີຊາເອນເອີ້ນວ່າ ເມຊາກ, ແລະ ອາຊາລີຢາເອີ້ນວ່າອາເບັດເນໂກ.
8ແຕ່ດານີແອນໄດ້ຕັ້ງໃຈວ່າຈະບໍ່ເຮັດໂຕເປັນມົນທິນດ້ວຍອາຫານປານິດຂອງກະສັດ ຫລືດ້ວຍເຫລົ້າອະງຸ່ນຊຶ່ງພະອົງໄດ້ດື່ມ.
ດັ່ງນັ້ນເຂົາຈຶ່ງໄດ້ອະນຸຍາດຫົວຫນ້າຣາຊການ ເພື່ອເຂົາຈະບໍ່ເຮັດໂຕເອງເປັນມົນທິນ.9ບັດນີ້ພຣະເຈົ້າໄດ້ປຣະທານຄວາມຊື່ນຊົມ ແລະ
ຄວາມເຫັນໃຈດານີແອນໂດຍຜ່ານຄວາມນັບຖືທີ່ ຫົວຫນ້າຂ້າຣາຊການມີຕໍ່ເຂົາ.10ຫົວຫນ້າຂ້າຣາຊການໄດ້ກ່າວຕໍ່ດານີແອນວ່າ,
"ຂ້ານ້ອຍຢ້ານກະສັດນາຍຂອງຂ້ານ້ອຍ. ພະອົງໄດ້ຊົງສັ່ງອາຫານ ແລະເຄື່ອງດື່ມ ທີ່ພວກທ່ານຄວນໄດ້ຮັບປະທານ,
ເພາະເຫດໃດຈຶ່ງໃຫ້ພະອົງຄວນເຫັນວ່າພວກທ່ານເບິ່ງຂີ້ຮ້າຍ ກວ່າບັນດາຄົນຫນຸ່ມອາຍຸລຸ້ນລາວຄາວດຽວກັນ?
ກະສັດອາດຈະຕັດຫົວຂ້ານ້ອຍເພາະພວກທ່ານ."
11ແລ້ວດານີແອນໄດ້ກ່າວແກ່ຜູ້ຮັບໃຊ້ທີ່ຫົວຫນ້າຂ້າຣາຊການໄດ້ກຳນົດໃຫ້ເບິ່ງແຍງດານີແອນ, ຮານານີຢາມີຊາເອນ, ແລະ ອາຊາລີຢາ.
12ເຂົາໄດ້ກ່າວວ່າ, "ຂໍທົດສອບກັບພວກເຮົາ, ຜູ້ຮັບໃຊ້ຂອງທ່ານ, ຈັກສິບວັນ. ຂໍນຳຜັກຕ່າງໆ ມາໃຫ້ເຮົາກິນ ແລະ ນ້ຳມາໃຫ້ເຮົາດື່ມກໍພໍແລ້ວ.
13ແລ້ວກວດເບິ່ງຫນ້າຕາຂອງເຮົາ ທຽບກັບຫນ້າຕາຂອງບັນດາຄົນຫນຸ່ມຜູ້ທີ່ກິນອາຫານປານິດຂອງກະສັດ, ແລະ ຈຶ່ງປະຕິບັດກັບພວກເຮົາ,
ຜູ້ຮັບໃຊ້ພວກທ່ານ, ຈາກສິ່ງທີ່ທ່ານໄດ້ເຫັນ."
14ດັ່ງນັ້ນຄົນຮັບໃຊ້ເຫັນດ້ວຍກັບເຂົາທີ່ຈະເຮັດສິ່ງນີ້, ແລະ ເຂົາໄດ້ທົດສອບພວກເຂົາເປັນເວລາສິບມື້.
15ເມື່ອຄົບສິບມື້ແລ້ວຮູບຮ່າງຂອງເຂົາກໍເບິ່ງແຂງແຮງດີກວ່າ, ແລະ ເນື້ອຫນັງເປັ່ງປັ່ງກວ່າບັນດາຄົນຫນຸ່ມທີ່ກິນອາຫານອັນປານິດຂອງກະສັດ.
16ດັ່ງນັ້ນຄົນຮັບໃຊ້ຈຶ່ງເອົາອາຫານປານິດສ່ວນຂອງພວກເຂົາ ແລະ ເຫລົ້າອາງຸ່ນຊຶ່ງເຂົາຈະໄດ້ກິນນັ້ນໄປ ແລ້ວໃຫ້ພວກເຂົາພຽງແຕ່ຜັກເທົ່ານັ້ນ.
17ສຳລັບພວກຄົນຫນຸ່ມທັງສີ່ຄົນນີ້, ພຣະເຈົ້າໄດ້ປຣະທານຄວາມຮູ້ ແລະ ຄວາມເຂົ້າໃຈຢ່າງຊຳນິຊຳນານທັງປວງ ແລະ ປັນຍາ, ແລະ
ດານີແອນກໍໄດ້ສາມາດເຂົ້າໃຈນິມິດ ແລະ ຄວາມຝັນທຸກຢ່າງ.18ພໍຮອດກຳນົດເວລາ ທີ່ກະສັດຊົງບັນຊາໃຫ້ເຂົາທັງຫລາຍເຂົ້າເຝົ້າ,
ຫົວຫນ້າຂ້າຣາຊການຈຶ່ງນຳພວກເຂົາທັງຫລາຍເຂົ້າມາເຝົ້າເນບູກາດເນັດຊາ.
19ກະສັດໄດ້ກ່າວກັບພວກເຂົາ, ແລະ ໃນບັນດາຄົນຫນຸ່ມເຫລົ່ານັ້ນບໍ່ເຫັນຈັກຄົນຫນຶ່ງທີ່ປຽບທຽບດານີເອນ, ຮານານີຢາ, ມີຊາເອນ, ແລະ
ອາຊາຣີຢາໄດ້. ພວກເຂົາໄດ້ຢືຢັນຕໍ່ຫນ້າກະສັດ, ພ້ອມທີ່ຈະຮັບໃຊ້ພະອົງ.20ໃນທຸກຄຳຖາມແຫ່ງປັນຍາ ແລະ
ຄວາມເຂົ້າໃຈທີ່ກະສັດໄດ້ຖາມພວກເຂົາ, ພະອົງພົບວ່າພວກເຂົາຕອບໄດ້ດີກວ່າຜູ້ມີຄາຖາອາຄົມທັງຫມົດສິບເທົ່າ ແລະ
ຜູ້ຄົນເຫລົ່ານັ້ນຊຶ່ງອ້າງວ່າ ເວົ້າກັບຄົນຕາຍໄດ້, ຜູ້ທີ່ຢູ່ໃນອານາຈັກຂອງພະອົງທັງຫມົດ.21ດານີເອນໄດ້ຮັບໃຊ້ຢູ່ທີ່ນັ້ນເລື້ອຍມາ
ຈົນເຖິງສະໄຫມທຳອິດຂອງກະສັດໄຊຣັດ.

 generated on Tue Jun 17 19:01:42 2025

# 2

1ໃນປີທີສອງຣາຊການຂອງເນບູກາດເນັດຊາ, ພະອົງໄດ້ຊົງຝັນ. ພະອົງໄດ້ທຸກໃຈ, ແລະ ພະອົງບໍ່ສາມາດນອນຫລັບໄດ້.
2ແລ້ວກະສັດຈຶ່ງໄດ້ບັນຊາໃຫ້ເອີ້ນເຫລົ່ານັກວິທະຍາຄົມ ແລະ ຄົນເຫລົ່ານັ້ນໄດ້ອ້າງວ່າເວົ້າກັບຄົນຕາຍໄດ້.
ພະອົງໄດ້ຊົງເອີ້ນຜູ້ຊົງມີເວດມົນຄາຖາ ແລະ ນັກປາດເຂົ້າມາດ້ວຍ. ພະອົງຕ້ອງການໃຫ້ພວກເຂົາ
ເວົ້າກ່ຽວກັບຄວາມຝັນຂອງພະອົງນັ້ນເປັນຢ່າງໃດ. ດັ່ງນັ້ນ ພວກເຂົາຈຶ່ງໄດ້ເຂົ້າເຝົ້າ ແລະ ຢືນຢູ່ຕໍ່ຫນ້າກະສັດ.

3ກະສັດໄດ້ກ່າວກັບພວກເຂົາວ່າ, "ເຮົາໄດ້ຝັນ ແລະ
ຈິດໃຈຂອງເຮົາກໍກະວົນກະວາຍຢາກຮູ້ວ່າຄວາມຫມາຍຂອງສິ່ງທີ່ໄດ້ຝັນ."4ແລ້ວພວກນັກປາດໄດ້ຕອບກະສັດເປັນພາສາອາຣາມິກວ່າ,
"ຂ້າແດ່ກະສັດ, ຂໍຊົງພະຈະເລີນເປັນນິດ! ຂໍເລົ່າຄວາມຝັນໃຫ້ແກ່ພວກຂ້ານ້ອຍ, ບັນດາຜູ້ຮັບໃຊ້ຂອງພຣະອົງ,
ແລະພວກຂ້ານ້ອຍຈະໄດ້ແກ້ຄວາມຝັນນັ້ນໃຫ້."
5ກະສັດໄດ້ຊົງຕອບພວກນັກປາດວ່າ, “ເລື່ອງນີ້ໄດ້ຕັດສິນແລ້ວວ່າ. ຖ້າເຈົ້າບໍ່ເປີດເຜີຍຄວາມຝັນໃຫ້ເຮົາຮູ້ ພ້ອມທັງແກ້ຄວາມຝັນ,
ຮ່າງຂອງເຈົ້າຈະຖືກສັກອອກຈາກກັນ ແລະ ບ້ານເຮືອນຂອງເຈົ້າຈະຖືກເຮັດໃຫ້ເປັນກອງຂີ້ເຫຍື່ອ.6ແຕ່ຖ້າເຈົ້າເປີດເຜີຍຄວາມຝັນ
ແລະຄຳແກ້ຄວາມຝັນໃຫ້ເຮົາ, ເຈົ້າຈະໄດ້ຮັບຂອງຂວັນຈາກເຮົາ, ໄດ້ຮັບລາງວັນ, ແລະໄດ້ຮັບກຽດຕິຍົດຫຍິ່ງໃຫຍ່.
ດັ່ງນັ້ນຈົ່ງເປີດເຜີຍຄວາມຝັນ ແລະ ຄຳແກ້ຄວາມຝັນໃຫ້ເຮົາ."
7ເຂົາທັງຫລາຍໄດ້ກ່າວອີກຄັ້ງວ່າ, "ຂໍກະສັດຊົງເລົ່າຄວາມຝັນ, ແກ່ພວກຂ້ານ້ອຍ, ບັນດາຜູ້ຮັບໃຊຂອງພຣະອົງ ແລະ
ພວກຂ້ານ້ອຍຈະສາມາດແກ້ຄວາມຝັນນັ້ນໄດ້."8ກະສັດໄດ້ຊົງຕອບວ່າ,
"ເຮົາຮູ້ແນ່ແລ້ວວ່າພວກເຈົ້າພະຍາຍາມຖ່ວງເວລາໄວ້ເພາະເຈົ້າເຫັນວ່າການຕັດສິນໃຈຂອງເຮົາກ່ຽວກັບເລື່ອງນີ້ເດັດຂາດ.
9ແຕ່ຖ້າເຈົ້າບໍ່ໄດ້ບອກຄວາມຝັນໃຫ້ເຮົາໄດ້ຮູ້, ກໍມີຄຳຕັດສິນເຈົ້າຢູ່ຂໍ້ດຽວ. ພວກເຈົ້າໄດ້ຕັດສິນໃຈທີ່ຈະຕຽມຄຳເວົ້າທີ່ຕົວະ ແລະ
ຄຳເວົ້າຫລອກລວງຕໍ່ເຮົາທີ່ພວກເຈົ້າໄດ້ຕົກລົງກັນວ່າຈະເວົ້າກັບເຮົາຈົນກວ່າເຮົາຈະປ່ຽນໃຈຂອງເຮົາ. ດັ່ງນັ້ນແລ້ວ,
ຈົ່ງບອກຄວາມຝັນແກ່ເຮົາ, ແລະເຮົາຈະຮູ້ວ່າເຈົ້າແກ້ຄວາມຝັນໃຫ້ເຮົາໄດ້."
10ພວກນັກປາດຈຶ່ງໄດ້ກ່າວກັບກະສັດວ່າ, "ບໍ່ມີໃຜໃນແຜ່ນດິນທີ່ຈະຕອບສະຫນອງພະປະສົງຂອງກະສັດໄດ້. ເພາະວ່າບໍ່ມີກະສັດຍິ່ງໃຫຍ່,
ແລະ ຊົງລິດອົງໃດມີພະປະສົງເຊັ່ນນີ້ຈາກນັກເວດມົນ, ຫລື ຈາກຜູ້ໃດກໍຕາມທີ່ອ້າງວ່າໄດ້ເວົ້າກັບຄົນຕາຍ, ຫລື ຈາກນັກປາດ.
11ສິ່ງໃດຊຶ່ງກະສັດໄດ້ຊົງພະປະສົງນັ້ນຍາກ, ແລະ ບໍ່ມີໃຜຈະສາມາດບອກກະສັດໄດ້ນອກຈາກບັນດາພະຕ່າງໆ, ແລະ
ພວກເຂົາຜູ້ບໍ່ໄດ້ຢູ່ກັບພວກມະນຸດ."
12ເລື່ອງນີ້ເຮັດໃຫ້ກະສັດບໍ່ພໍໃຈ ແລະ ຊົງໃຈຮ້າຍຫລາຍ, ແລະ ພະອົງຊົງໄດ້ມີຄຳສັ່ງໃຫ້ຂ້າຄົນເຫລົ່ານັ້ນໃນບາບີໂລນ
ຜູ້ທີ່ມີຊື່ສຽງໃນຄວາມສະຫລຽວສະຫລາດຂອງພວກເຂົາ.
13ດັ່ງນັ້ນຈຶ່ງໄດ້ມີຄຳສັ່ງປະກາດອອກໄປວ່າຄົນເຫລົ່ານັ້ນທັງຫມົດທີ່ມີຊື່ສຽງໃນຄວາມສະຫລຽວສະຫລາດຕ້ອງຖືກຂ້າຕາຍ. ເພາະພະຄຳສັ່ງນີ້,
ພວກເຂົາຈຶ່ງໄດ້ຕາມຫາດານີເອນ ແລະ ເພື່ອນໆຂອງເຂົາ ເພື່ອຈະນຳພວກເຂົາໄປຂ້າເສຍ.
14ແລ້ວດານີເອນກໍໄດ້ຕອບດ້ວຍຄວາມຮອບຄອບ ແລະ ສະຫລາດຕໍ່ອາຣີໂອກຫົວຫນ້າຣາຊອົງຄະລັກຂອງກະສັດ,
ຜູ້ມາປະຫານຄົນເຫລົ່ານັ້ນໃນບາບີໂລນທີ່ມີຊື່ສຽງໃນຄວາມສະຫລຽວສະຫລາດຂອງພວກເຂົາ.15ດານີເອນເພິ່ນໄດ້ຖາມອາຣີໂອກວ່າ
"ເປັນຫຍັງກະສັດຈຶ່ງອອກຄຳສັ່ງຮຸນແຮງດັ່ງນີ້?" ດັ່ງນັ້ນອາຣີໂອກຈຶ່ງໄດ້ບອກໃຫ້ດານີເອນຮູ້ວ່າໄດ້ມີຫຍັງເກີດຂຶ້ນ.16ແລ້ວດານີເອນໄດ້ໄປ ແລະ
ຂໍການນັດຫມາຍເຂົ້າເຝົ້າກະສັດເພື່ອເຂົາຈະສາມາດຖວາຍຄຳແກ້ຄວາມຝັນແດ່ພະອົງ.
17ແລ້ວດານີເອນກໍໄດ້ໄປບ້ານຂອງເຂົາແລະ ໄດ້ອະທິບາຍແກ່ ຮານານີຢາ, ມີຊາເອນ, ແລະ ອາຊາລີຢາ, ວ່າໄດ້ມີສິ່ງໃດເກີດຂຶ້ນ.
18ເຂົາໄດ້ຂໍໃຫ້ທູນຂໍພຣະເມດຕາກະລຸນາຈາກພຣະເຈົ້າ ແຫ່ງຟ້າກ່ຽວກັບເລື່ອງຄວາມລຶກລັບນີ້ ເພື່ອທີ່ດານີເອນ ແລະ
ເພື່ອນຂອງເຂົາຈະບໍ່ຖືກຂ້າພ້ອມທັງບັນດາຄົນອື່ນໆຂອງບາບີໂລນຜູ້ມີຊື່ສຽງໃນຄວາມສະຫລຽວສະຫລາດທັງຫລາຍນັ້ນ.
19ໃນຄືນນັ້ນຄວາມລຶກລັບໄດ້ເປີດເຜີຍກັບດານີເອນໃນນິມິດ. ແລ້ວດານີເອນກໍໄດ້ຖວາຍສາທຸການແດ່ພຣະເຈົ້າແຫ່ງຟ້າສະຫວັນ20ແລະ
ໄດ້ກ່າວ່າ, "ສາທຸການແດ່ພຣະນາມຂອງພຣະເຈົ້າຕະຫລອດໄປ ແລະ ສືບໄປ; ເພາະພຣະສະຕິປັນຍາ ແລະ ຣິດທານຸພາບຂອງພຣະອົງ.
21ພຣະອົງຊົງປ່ຽນເວລາ ແລະ ລະດູການຕ່າງໆ; ພຣະອົງຊົງແຕ່ງຕັ້ງ ແລະ ປົດກະສັດລົງຈາກບັນລັງຂອງພວກເຂົາ.
ພຣະອົງປຣະທານສະຕິປັນຍາແກ່ນັກປາດ ແລະ ຄວາມຮູ້ແກ່ຄົນເຫລົ່ານັ້ນໃຫ້ມີຄວາມເຂົ້າໃຈ.22ພຣະອົງຊົງເປີດເຜີຍສິ່ງລຶກລັບ ແລະ
ສິ່ງທີ່ໄດ້ຖືກປົກປິດໄວ້ ເພາະພຣະອົງຊົງຮູ້ເລື່ອງທີ່ປົກປິດໄວ້ໃນຄວາມມືດ, ແລະ ຄວາມສະຫວ່າງຢູ່ກັບພຣະອົງ.
23ພຣະເຈົ້າແຫ່ງບັນພຣະບູລຸດຂອງຂ້ານ້ອຍ, ຂ້ານ້ອຍຂໍຂອບພະຄຸນ ແລະ ສັນລະເສີນພຣະອົງ ສຳລັບປັນຍາ ແລະ
ພະລັງທີ່ໄດ້ປະທານໃຫ້ຂ້ານ້ອຍ. ບັດນີ້ພຣະອົງໄດ້ຊົງໃຫ້ຂ້ານ້ອຍໄດ້ຮູ້ ໃນສິ່ງທີ່ຂ້ານ້ອຍທູນຂໍຈາກພຣະອົງ;
ກໍຊົງໃຫ້ຂ້ານ້ອຍຮູ້ແລ້ວກ່ຽວກັບເລື່ອງທີ່ກະສັດຊົງກັງວົນ."
24ແລ້ວອານີເອນກໍໄດ້ໄປຫາອາຣີໂອກ (ຜູ້ຊຶ່ງກະສັດໄດ້ແຕ່ງຕັ້ງໃຫ້ປະຫານຜູ້ປຶກສາຂອງບາບີໂລນ). ດານີເອນໄດ້ໄປ ແລະ
ກ່າວກັບພວກເຂົາວ່າ, "ຂໍຢ່າປະຫານນັກປາດໃນບາບີໂລນ. ໃຫ້ນຳພວກຂ້ານ້ອຍ ເຂົ້າເຝົ້າກະສັດ ແລະ
ຂ້ານ້ອຍຈະຖວາຍຄຳແກ້ຄວາມຝັນແກ່ພະອົງ."
25ແລ້ວອາຣີໂອກກໍໄດ້ຮີບນຳດານີເອນເຂົ້າເຝົ້າກະສັດ ແລະ ໄດ້ທູນພະອົງວ່າ, "ຂ້ານ້ອຍ ໄດ້ພົບຊາຍຄົນຫນຶ່ງທີ່ຖືກກວາດເປັນຊະເລີຍ
ຈາກຢູດາ ຜູ້ຊາຍທີ່ຈະສາມາດແກ້ຄວາມຝັນຂອງກະສັດໄດ້."26ກະສັດຈຶ່ງໄດ້ກ່າວຕໍ່ດານີເອນວ່າ (ຜູ້ມີຊື່ວ່າເບນເຕຊັດຊາເຣ),
"ເຈົ້າສາມາດໃຫ້ເຮົາຮູ້ຄວາມຝັນທີ່ເຮົາໄດ້ຝັນ ແລະ ຄວາມຫມາຍໄດ້ບໍ?“
27ດານີເອນທູນກະສັດວ່າ, "ຄວາມລຶກລັບ ທີ່ກະສັດໄດ້ກ່າວເຖິງນັ້ນບໍ່ມີນັກປາດ ຫລືຄົນເຫລົ່ານັ້ນທີ່ອ້າງວ່າເວົ້າກັບຄົນຕາຍໄດ້, ຫລື
ນັກມາຍາກົນ ຫລື ຫມໍວິຊາອາຄົມ ຫລື ຫມໍດູເລືອກຍາມ ຄົນໃດດອກຈະສາມາດບອກພະອົງຢ່າງນັ້ນໄດ້.28ຢ່າງໃດກໍຕາມ, ມີພຣະເຈົ້າອົງຫນຶ່ງ
ຜູ້ຊົງສະຖິດໃນຟ້າສະຫວັນ, ຜູ້ຊົງເປີດເຜີຍຄວາມລຶກລັບທັງຫລາຍ, ແລະ ພຣະອົງຊົງໃຫ້ກະສັດເນບູກາດເນັດຊາ,
ໄດ້ຮູ້ເຖິງສິ່ງທີ່ຈະເກີດຂຶ້ນໃນອານາຄົດທີ່ກຳລັງຈະຮອດນີ້. ຄືຄວາມຝັນແລະ ນິມິດທີ່ເກີດຂຶ້ນໃນຂະນະທີ່ພະອົງຊົງບັນທົມມີດັ່ງນີ້.


generated on Tue Jun 17 19:01:42 2025

[29]ຂ້າແດ່ກະສັດ, ຂະນະເມື່ອພະອົງບັນທົມພະອົງໄດ້ຝັນເຫັນສິ່ງທີ່ຈະກຳລັງເກີດຂຶ້ນໃນອານາຄົດ, ແລະ
ເພາະພຣະເຈົ້າຜູ້ຊົງເປີດເຜີຍເລື່ອງລຶກລັບທັງຫລາຍແກ່ພຣະອົງຊົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນ.[30]ສ່ວນຂ້ານ້ອຍນັ້ນ,
ຄວາມລຶກລັບນັ້ນບໍ່ໄດ້ຮັບການເປີດເຜີຍຕໍ່ຂ້ານ້ອຍ ບໍ່ແມ່ນວ່າສະຕິປັນຍາຂອງຂ້ານ້ອຍມີຫລາຍກວ່າຄົນອື່ນໆທີ່ຍັງມີຊີວິດຢູ່.
ຄວາມລຶກລັບນີ້ໄດ້ເປີດເຜີຍຕໍ່ຂ້ານ້ອຍ ກໍເພື່ອທີ່ພະອົງ, ກະສັດ, ຈະຮູ້ຄຳແກ້ຄວາມຝັນ,
ແລະເພື່ອພະອົງຈະເຂົ້າໃຈໃນຄວາມຫມາຍອັນເລິກເຊິ່ງໃນພະໄທຂອງພະອົງເອງ.
[31]ຂ້າແດ່ກະສັດ, ພະອົງຊົງໄດ້ທົບທວນ ແລະພະອົງຊົງທອດພະເນດ. ຮູບປັ້ນຂະຫນາດໃຫຍ່, ຮູບປັ້ນນີ້. ຊຶ່ງມີອຳນາດຫລາຍແລະສົດໃສຍິ່ງ,
ໄດ້ຕັ້ງຢູ່ຕໍ່ຫນ້າພະອົງ. ຄວາມສົດໃສຂອງມັນເປັນຕາຢ້ານ. [32]ຫົວຂອງຮູບປັ້ນນີ້ໄດ້ເຮັດດ້ວຍຄຳຢ່າງດີທີ່ສຸດ. ເອິກແລະແຂນເປັນເງິນ.
ສ່ວນແອວແລະກົກຂາເປັນທອງສຳຣິດ,[33]ແລະສ່ວນຂາໄດ້ເຮັດດ້ວຍເຫລັກ. ສ່ວນຕີນທັງສອງຂ້າງຂອງມັນເປັນເຫລັກສ່ວນຫນຶ່ງ
ແລະດິນຫນຽວສ່ວນຫນຶ່ງ.
[34]ຂະນະພະອົງໄດ້ຊົງທົບທວນ, ແລະມີຫີນກ້ອນຫນຶ່ງໄດ້ຖືກຕັດອອກ, ມາແມ່ນວ່າບໍ່ແມ່ນດ້ວຍມືມະນຸດ,
ຫີນນັ້ນກະທົບຮູບປັ້ນທີ່ຕີນອັນເປັນເຫລັກປົນດິນຫນຽວ, ເຮັດໃຫ້ມັນແຕກມຸ່ນໄປ[35]ແລ້ວສ່ວນເຫລັກ, ດິນຫນຽວ, ທອງສຳຣິດ, ເງິນ,
ແລະທອງຄຳ ກໍແຕກເປັນສ່ວນໆ ພ້ອມກັນກາຍເປັນເຫມືອນແກບ. ຢູ່ລານພາດເຂົ້າໃນລະດູຮ້ອນ
ລົມກໍພັດພາເອົາໄປທົ່ວຈົນຫາຮ່ອງຮອຍຂອງມັນບໍ່ພົບອີກເລີຍ. ແຕ່ກ້ອນຫີນທີ່ກະທົບຮູບປັ້ນນັ້ນໄດ້ກາຍເປັນພູເຂົາໃຫຍ່ຈົນເຕັມພິພົບ.
[36]ນີ້ເປັນຄວາມຝັນ, ບັດນີ້ຂ້ານ້ອຍຂໍບອກຄຳແກ້ຄວາມຝັນໃຫ້ກະສັດຊົງຮູ້ວ່າ.[37]ຂ້າແດ່, ກະສັດ, ພະອົງຊົງເປັນກະສັດເຫນືອກະສັດທັງຫລາຍ
ຜູ້ຊຶ່ງພຣະເຈົ້າແຫ່ງຟ້າໄດ້ປະທານຣາຊອານາຈັກ, ອານຸພາບ, ຣິດເດດ, ແລະ ກຽດຕິຍົດ.[38]ພຣະເຈົ້າໄດ້ຊົງມອບໄວ້ໃນມືຂອງພະອົງ ສະຖານທີ່
ທີ່ມະນຸດໄດ້ອາໄສຢູ່ ພຣະເຈົ້າໄດ້ຊົງມອບໄວ້ໃຫ້ປົກຄອງບັນດາສັດແຫ່ງທ້ອງທົ່ງ, ແລະບັນດານົກໃນທ້ອງຟ້າໄວ້ໃນມືຂອງພະອົງແລ້ວ.
ພຣະອົງມອບໃຫ້ພະອົງປົກຄອງທຸກສິ່ງທຸກຢ່າງພະອົງຄືຫົວທອງຄຳນັ້ນ.
[39]ຕໍ່ຈາກພະອົງ, ໄປຈະມີຣາຊອານາຈັກ ດ້ອຍກວ່າຂອງພຣະອົງປະກົດຂຶ້ນ, ແລະຍັງມີຣາຊອານາຈັກທີສາມເປັນທອງສຳຣິດ
ຊຶ່ງຈະປົກຄອງຢູ່ທົ່ວພິພົບ.
[40]ຈະມີຣາຊອານາຈັກທີສີ່, ແຂງແຮງດັ່ງເຫລັກ, ເພາະວ່າເຫລັກຕີສິ່ງທັງຫລາຍໃຫ້ຫັກແລະແຕກເປັນສ່ວນໆຢ່າງໃດ.
ຣາຊອານາຈັກນັ້ນຈະຫັກ ແລະທຸບສິ່ງເຫລົ່ານີ້ດັ່ງເຫລັກຊຶ່ງທຸບໃຫ້ແຫລກຢ່າງນັ້ນ.
[41]ດັ່ງທີ່ພະອົງ, ໄດ້ຊົງເບິ່ງເຫັນບັນດາຕີນແລະນິ້ວຕີນເປັນດິນຂອງຊ່າງປັ້ນຫມໍ້ແນ່ ເຫລັກແນ່; ດັ່ງນັ້ນຈະເປັນອານາຈັກທີ່ຖືກແຍກ,
ແຕ່ຄວາມແຂງຂອງເຫລັກຈະຢູ່ໃນນັ້ນແນ່, ດັ່ງທີ່ພະອົງໄດ້ຫລຽວເຫັນເຫລັກປົນດິນຫນຽວ.[42]ແລະນິ້ວຂອງບັນດາຕີນເປັນເຫລັກ ແລະ
ປົນດິນຢ່າງໃດ, ຣາຊອານາຈັກນັ້ນຈຶ່ງແຂງແຮງແຕ່ເສຍຫາຍງ່າຍຢ່າງນັ້ນ.[43]ດັ່ງທີ່ພະອົງໄດ້ຊົງເຫັນເຫລັກປົນດິນຫນຽວ,
ດັ່ງນັ້ນປະຊາຊົນຈະປະສົມປົນເປກັນ ພວກເຂົາຈະບໍ່ຍຶດກັນແຫນ້ນເຊັ່ນດຽວກັນກັບເຫລັກບໍ່ປະສົມເຂົ້າກັບດິນ.
[44]ໃນສະໄຫມຂອງກະສັດ, ເຫລົ່ານັ້ນ ພຣະເຈົ້າແຫ່ງຟ້າຈະສະຖາປະນາອານາຈັກຫນຶ່ງ ຊຶ່ງບໍ່ມີວັນຖືກທຳລາຍ,
ຫລືຖືກເອົາຊະນະໂດຍຊົນຊາດອື່ນ. ຣາຊອານາຈັກນັ້ນຈະເຮັດໃຫ້ ຣາຊອານາຈັກເຫລົ່ານີ້ທັງຫມົດແຕກເປັນສ່ວນໆ
ແລະອານາຈັກເຫລົ່ານັ້ນສູນສິ້ນໄປ, ແລະຣາຊອານາຈັກນັ້ນຈະຕັ້ງຫມັ້ນຢູ່ເປັນນິດ.[45]ດັ່ງທີ່ພະອົງ, ຊົງເຫັນກ້ອນຫີນຖືກຕັດອອກຈາກພູເຂົາ,
ບໍ່ແມ່ນດ້ວຍມືຂອງມະນຸດ ແລະກ້ອນຫີນ. ນັ້ນໄດ້ເຮັດໃຫ້ເຫລັກ, ທອງສຳຣິດ, ດິນຫນຽວ, ເງິນ, ແລະ ທອງຄຳ. ແຕກເປັນສ່ຽງໆ
ພຣະເຈົ້າຫຍິ່ງໃຫຍ່ໄດ້ຊົງໃຫ້, ກະສັດ, ຮູ້ວ່າອີຫຍັງຈະເກີດຂຶ້ນຫລັງຈາກນີ້. ຄວາມຝັນນັ້ນເປັນຈິງ ແລະຄຳແກ້ຄວາມຝັນນັ້ນກໍເຊື່ອຖືໄດ້.“
[46]ກະສັດເນບູກາດເນັດຊາໄດ້ກົ້ມລົງຕໍ່ຫນ້າດານີເອນແລະໃຫ້ກຽດເຂົາ, ພະອົງຊົງສັ່ງໃຫ້ນຳເຄື່ອງບູຊາ ແລະເຄື່ອງຫອມມາໃຫ້ດານີເອນ.
[47]ກະສັດໄດ້ກ່າວຕໍ່ດານີເອນວ່າ, “ແນ່ນອນ ພຣະເຈົ້າຂອງທ່ານຊົງເປັນພຣະເຈົ້າ,
ເຫນືອເທບທັງຫລາຍແລະຊົງເປັນພຣະຜູ້ເປັນເຈົ້າເຫນືອກະສັດທັງປວງ, ແລະຊົງເປັນຜູ້ເປີດເຜີຍຄວາມລຶກລັບ,
ເພາະທ່ານສາມາດເປີດເຜີຍຄວາມລຶກລັບນີ້ໄດ້.“
[48]ແລ້ວກະສັດຊົງໃຫ້ດານີເອນໄດ້ຮັບກຽດຢ່າງສູງ ແລະປະທານຂອງຂວັນໃຫຍ່ໃຫ້ຈຳນວນຫລາຍ.
ອີກທັງຊົງແຕ່ງຕັ້ງໃຫ້ເປັນຜູ້ຄອບຄອງແຂວງບາບີໂລນ. ດານີເອນໄດ້ເປັນຫົວຫນ້າພວກທີ່ປຶກສາບາບີໂລນ.[49]ດານີເອນກໍໄດ້ທູນຂໍຕໍ່ກະສັດ,
ແລະກະສັດໄດ້ຊົງຕັ້ງ ຊັດຣາກ, ເມຊາກ, ແລະອາເບັດເນໂກເປັນຜູ້ບໍລິຫານຢູ່ໃນແຂວງບາບີໂລນ.
ແລະຍັງຊົງໃຫ້ດານີເອນຮັບຕຳແຫນ່ງຢູ່ໃນຣາຊວັງຂອງກະສັດ.


generated on Tue Jun 17 19:01:42 2025

# 3

[1]ກະສັດເນບູກາດເນັດຊາໄດ້ຊົງສ້າງຮູບປັ້ນຄໍາຮູບຫນຶ່ງສູງຫົກສິບສອກ ກວ້າງຫົກສອກ.
ພະອົງໄດ້ຊົງຕັ້ງຮູບນີ້ໄວ້ທີ່ງພຽງດູລາໃນແຂວງບາບີໂລນ[2]ແລ້ວກະສັດເນບູກາດເນັດຊາໄດ້ຊົງຮັບສັ່ງໃຫ້ປະຊຸມພວກຜູ້ວ່າການມົນທົນ,
ຜູ້ວ່າການເຂດ, ແລະຜູ້ວ່າການທ້ອງຖິ່ນ, ພ້ອມດ້ວຍຮອງເຈົ້າແຂວງ, ຜູ້ປົກຄອງກໍາແພງນະຄອນ, ນາຍຄັງ, ຜູ້ພິພາກສາຕຸລາການ,
ແລະບັນດາເຈົ້າຫນ້າທີ່ຊັ້ນສູງຂອງແຂວງ ໃຫ້ເຂົ້າມາໃນງານສະຫລອງຮູບປັ້ນຊຶ່ງກະສັດເນບູກາດເນັດຊາໄດ້ຊົງຕັ້ງຂຶ້ນ.

[3]ແລ້ວພວກຜູ້ວ່າການມົນທົນ, ຜູ້ວ່າການເຂດ, ແລະຜູ້ວ່າການທ້ອງຖິ່ນ, ພ້ອມດ້ວຍອົງຄະມົນຕີ, ນາຍຄັງ, ຜູ້ພິພາກສາ, ຕຸລາການ,
ແລະບັນດາເຈົ້າຫນ້າທີ່ຊັ້ນສູງ ຂອງມົນທົນກໍໄດ້ເຂົ້າມາປະຊຸມເພື່ອງານສະຫລອງຮູບປັ້ນຊຶ່ງກະສັດເນບູກາດເນັດຊາໄດ້ຊົງຕັ້ງຂຶ້ນ.
ພວກເຂົາທັງຫລາຍໄດ້ມາຢືນຢູ່ຕໍ່ຫນ້າຮູບປັ້ນນັ້ນ.[4]ແລ້ວໂຄສົກກໍໄດ້ປະກາດດ້ວຍສຽງດັງວ່າ, "ບັນດາປະຊາຊົນທັງຫລາຍ,
ພວກທ່ານໄດ້ຮັບຣາຊອົງການມາຍັງຊົນທຸກຊາດ, ທຸກເຜົ່າ, ແລະ ທຸກພາສາ,[5]ເມື່ອທ່ານທັງຫລາຍໄດ້ຍິນສຽງເຂົາສັດ, ຂຸ່ຍ, ພິນເຂົາຄູ່,
ພິນສີສາຍ, ພິນໃຫຍ່, ປີ່ຖົງ, ແລະເຄື່ອງດົນຕີທຸກຊະນິດ,
ພວກທ່ານຈະຕ້ອງກາບລົງນະມັດສະການຮູບປັ້ນທອງຄໍາຊຶ່ງກະສັດເນບູກາດເນັດຊາໄດ້ຊົງຕັ້ງໄວ້.
[6]ຜູ້ໃດບໍ່ກາບລົງແລະນະມັດສະການ, ໃນເວລານັ້ ກໍຈະຖືກໂຍນເຂົ້າ, ໄປໃນເຕົາໄຟລຸກຢູ່."[7]ດັ່ງນັ້ນເມື່ອປະຊາຊົນໄດ້ຍິນສຽງ ເຂົາສັດ, ຂຸ່ຍ,
ພິນເຂົາຄູ່, ພິນສີສາຍ, ພິນໃຫຍ່, ປີ່ຖົງ, ແລະເຄື່ອງດົນຕຣີທຸກຊະນິດ, ປະຊາຊົນທຸກຊາດ, ທຸກເຜົ່າ,
ແລະທຸກພາສາກໍໄດ້ກົ້ມກາບແລະນະມັດສະການຮູບປັ້ນທອງຄໍາຊຶ່ງກະສັດເນບູກາດເນັດຊາໄດ້ຊົງຕັ້ງໄວ້ບັດນີ້.
[8]ໃນເວລານັ້ນພວກເຄເດັຍບາງຄົນໄດ້ເຂົ້າມາ ແລະໄດ້ນໍາຂໍ້ກ່າວຫາຕໍ່ພວກຢິວທັງຫລາຍ.[9]ພວກເຂົາໄດ້ທູນກະສັດເນບູກາດເນັດຊາວ່າ,
“ຂ້າແດ່ກະສັດ, ຂໍຊົງພະຈະເລີນເປັນນິດ![10]ຂ້າແດ່, ກະສັດ, ພະອົງໄດ້ຊົງອອກຄໍາສັ່ງແລ້ວວ່າ ທຸກຄົນທີ່ໄດ້ຍິນສຽງເຂົາສັດ, ຂຸ່ຍ, ພິນເຂົາຄູ່,
ພິນສີສາຍ, ພິນໃຫຍ່, ແລະປີ່ຖົງ, ແລະເຄື່ອງດົນຕີທຸກຊະນິດ, ຈະຕ້ອງກົ້ມຂາບແລະນະມັດສະການການຮູບປັ້ນທອງຄໍາ.
[11]ຜູ້ໃດກໍຕາມທີ່ບໍ່ກາບລົງແລະນະມັດສະການກໍຈະຕ້ອງຖືກໂຍນເຂົ້າໄປໃນເຕົາໄຟລຸກໂຊນຢູ່.
[12]ບັດນີ້ມີຄົນຢິວບາງຄົນທີ່ພະອົງໄດ້ຊົງແຕ່ງຕັ້ງໃຫ້ເປັນຜູ້ບໍລິຫານມົນທົນບາບີໂລນ; ຄືຊັດຣາກ, ເມຊາກ, ແລະອາເບັດເນໂກ. ຂ້າແດ່, ກະສັດ,
ພວກຄົນເຫລົ່ານີ້ໄດ້ບໍ່ເຊື່ອຟັງພະຄໍາສັ່ງຂອງພະອົງ. ພວກເຂົາ ບໍ່ຍອມນະມັດສະການ ຫລືປະຕິບັດບັນດາພະຂອງພະອົງ,
ຫລືກົ້ມຂາບຕໍ່ຮູບປັ້ນທອງຄໍາທີ່ພະອົງຊົງຕັ້ງໄວ້.“
[13]ແລ້ວເນບູກາດເນັດຊາ, ກໍໄດ້ຊົງໂກດຮ້າຍ ໄດ້ຊົງມີລັບສັ່ງ, ໃຫ້ນໍາຕົວຊັດລາກ, ມີຊາກ, ແລະອາເບັດເນໂກ ເຂົ້າມາເຝົ້າພະອົງ.
ແລ້ວພວກເຂົາໄດ້ນໍາຄົນເຫລົ່ານີ້ເຂົ້າມາເຝົ້າກະສັດ.[14]ກະສັດເນບູກາດເນັດຊາໄດ້ກ່າວແກ່ເຂົາວ່າ, “ພວກເຈົ້າໄດ້ປ່ຽນໃຈຫລືຍັງ, ຊັດຣາກ,
ເມຊາກ, ແລະອາເບັດເນໂກ, ທີ່ເຈົ້າບໍ່ຍອມປະຕິບັດບັນດາພະຂອງເຂົາຫລືນະມັດສະການຮູບປັ້ນທອງຄໍາຊຶ່ງເຮົາໄດ້ຕັ້ງໄວ້?
[15]ບັດນີ້ຖ້າເຈົ້າພ້ອມແລ້ວ ພໍເຈົ້າໄດ້ຍິນສຽງເຂົາສັດ, ຂຸ່ຍ, ພິນເຂົາຄູ່, ພິນສີສາຍ, ພິນໃຫຍ່, ແລະປີ່ຖົງ, ແລະເຄື່ອງດົນຕຣີທຸກຊະນິດ,
ເຈົ້າຈົ່ງກາບນະມັດສະການ ຮູບປັ້ນທີ່ເຮົາໄດ້ສ້າງໄວ້ ທຸກຢ່າງກໍຈະດີເອງ. ແຕ່ຖ້າເຈົ້າບໍ່ນະມັດສະການ,
ກໍຕ້ອງໂຍນເຈົ້າເຂົ້າໄປໃນກອງໄຟລຸກໂຊນຢູ່ທັນທີ. ແລ້ວພຣະເຈົ້າອົງໃດຈະຊ່ວຍກູ້ເຈົ້າໃຫ້ພົ້ນຈາກມືຂອງເຮົາໄດ້?”
[16]ຊັດຣາກ, ເມຊາກ, ແລະ ອາເບັດເນໂກ, ໄດ້ທູນຕໍ່ກະສັດວ່າ, ”ຂ້າແດ່ເນບູກາດເນັດຊາ,
ຂ້ານ້ອຍທັງຫລາຍບໍ່ຈໍາເປັນຈະຕ້ອງຕອບພະອົງໃນເລື່ອງນີ້.[17]ຖ້າພຣະເຈົ້າຂອງພວກຂ້ານ້ອຍ, ຜູ້ຊຶ່ງພວກຂ້ານ້ອຍໄດ້ບົວລະບັດນັ້ນ
ພໍພຣະໄທທີ່ຈະຊ່ວຍພວກຂ້ານ້ອຍໃຫ້ພົ້ນຈາກເຕົາໄຟທີ່ລຸກໄຫມ້ຢູ່, ແລະພຣະອົງກໍຈະຊົງຊ່ວຍກູ້ພວກຂ້ານ້ອຍໃຫ້ພົ້ນຈາກມື, ຂອງກະສັດ.
[18]ແຕ່ຖ້າບໍ່ເປັນ, ເຊັ່ນນັ້ນຂ້າແດ່, ກະສັດ, ຂໍພະອົງຊົງຮູ້ວ່າ ພວກຂ້ານ້ອຍຈະບໍ່ບົວລະບັດພະຂອງພະອົງ,
ແລະພວກຂ້ານ້ອຍຈະບໍ່ນະມັດສະການພະທອງຄໍາຊຶ່ງພະອົງໄດ້ຊົງຕັ້ງຂຶ້ນນັ້ນ.
[19]ແລ້ວເນບູກາດເນັດຊາໄດ້ຊົງໂກດຮ້າຍຫລາຍຂຶ້ນ; ຫນ້າຂອງພະອົງກໍສະແດງຄວາມບໍ່ພໍໃຈ ຕໍ່ຊັດຣາກ, ເມຊາກ, ແລະອາເບັດເນໂກ.
ພະອົງຊົງມີລັບສັ່ງໃຫ້ເຮັດເຕົາໄຟໃຫ້ຮ້ອນກວ່າປົກກະຕິອີກເຈັດເທົ່າ.
[20]ແລ້ວພະອົງໄດ້ຊົງມີລັບສັ່ງໃຫ້ທະຫານທີ່ມີກໍາລັງຫລາຍໃນກອງທັບມາມັດຕົວຊັດຣາກ, ເມຊາກ, ແລະອາເບັດເນໂກ ແລະ
ໃຫ້ໂຍນພວກເຂົາເຂົ້າໄປໃນເຕົາທີ່ໄຟລຸກໄຫມ້ຢູ່.
[21]ພວກເຂົາໄດ້ຖືກມັດໄວ້ຂະນະທີ່ຍັງໃສ່ເສື້ອຄຸມ, ສົ້ງ, ຫມວກ, ແລະເຄື່ອງແຕ່ງກາຍອື່ນໆ,
ແລະພວກເຂົາໄດ້ຖືກໂຍນເຂົ້າໄປໃນເຕົາໄຟທີ່ກໍາລັງລຸກໄຫມ້ຢູ່.[22]ເນື່ອງຈາກວ່າຄໍາສັ່ງຂອງກະສັດນັ້ນໄດ້ຖືກປະຕິບັດ
ຕາມຢ່າງເຂັ້ມງວດຫລາຍແລະເຕົາໄຟນັ້ນຮ້ອນທີ່ສຸດ, ແປວໄຟຈຶ່ງໄດ້ຂ້າຄົນທີ່ອຸ້ມຊັດຣາກ, ເມຊາກ, ແລະອາເບັດເນໂກ.
[23]ຜູ້ຊາຍທັງສາມຄົນນີ້ຄື, ຊັດຣາກ, ເມຊາກ, ແລະອາເບັດເນໂກກໍໄດ້ຕົກລົງໄປໃນເຕົາໄຟທີ່ລຸກໄຫມ້ຢູ່ທັງໆທີ່ຍັງຖືກມັດ.
[24]ແລ້ວກະສັດເນບູກາດເນັດຊາກໍໄດ້ຊົງປະຫລາດໃຈ ແລະໄດ້ລຸກຂຶ້ນໃນທັນທີ. ເພິ່ນໄດ້ກ່າວກັບບັນດາອົງຄະມົນຕີເພິ່ນວ່າ,
“ເຮົາໄດ້ມັດສາມຄົນໂຍນລົງໄປໃນກອງໄຟບໍ່ແມ່ນບໍ?“ ພວກເຂົາໄດ້ທູນຕອບກະສັດວ່າ,“ ຂ້າແດ່ກະສັດ,
ເປັນຄວາມຈິງແນ່ນອນ.“[25]ພະອົງໄດ້ກ່າວວ່າ, “ແຕ່ເຮົາເຫັນສີ່ຄົນກໍາລັງຍ່າງຢູ່ກາງໄຟ ບໍ່ໄດ້ຖືກມັດ, ແລະບໍ່ເປັນອັນຕະລາຍ.
ຮູບຮ່າງຂອງຄົນທີສີ່ນັ້ນຄືກັບລູກຂອງເຫລົ່າເທບພຣະເຈົ້າ.“
[26]ແລ້ວເນບູກາດເນັດຊາກໍໄດ້ສະເດັດມາໃກ້ປາກເຕົາທີ່ໄຟລຸກໄຫມ້ຢູ່ນັ້ນ ກ່າວວ່າ, "ຊັດຣາກ, ເມຊາກ, ແລະອາເບັດເນໂກ,
ຜູ້ຮັບໃຊ້ຂອງພຣະເຈົ້າສູງສຸດ, ຈົ່ງອອກມາເຖີດ ຈົ່ງມາທີ່ນີ້!“ ແລ້ວຊັດຣາກ, ເມຊາກ, ແລະອາເບັດເນໂກ ກໍໄດ້ຍ່າງອອກມາຈາກໄຟ.
[27]ພວກຜູ້ວ່າການມົນທົນ, ຜູ້ວ່າການເຂດ, ຜູ້ວ່າການອື່ນໆ, ແລະອົງຄະມົນຕີໄດ້ພາກັນມາເບິ່ງຊາຍຫນຸ່ມເຫລົ່ານີ້.
ໄດ້ເຫັນວ່າໄຟບໍ່ໄດ້ເຮັດອັນຕະຣ່າງກາຍຂອງຄົນເຫລົ່ານີ້; ຜົມເທິງຫົວຂອງເຂົາກໍບໍ່ງໍ; ເສື້ອຄຸມຂອງພວກເຂົາບໍ່ເສຍຫາຍ;
ແລະບໍ່ມີກິ່ນໄຟໃນໂຕຂອງເຂົາເລີຍ.
[28]ເນບູກາດເນັດຊາໄດ້ກ່າວວ່າ, “ຂໍໃຫ້ພວກເຮົາໄດ້ສັນລະເສີນພຣະເຈົ້າຂອງຊັດຣາກ, ເມຊາກ, ແລະ ອາເບັດເນໂກ,
ຜູ້ໄດ້ຊົງໃຊ້ທູດຂອງພຣະອົງ ແລະໄດ້ຊົງສົ່ງສານຂອງພຣະອົງມາໃຫ້ຜູ້ຮັບໃຊ້ຂອງພຣະອົງ. ພວກເຂົາໄດ້ວາງໃຈໃນພະອົງ,


generated on Tue Jun 17 19:01:42 2025

ແລະບໍ່ໄດ້ຟັງຄຳບັນຊາຂອງເຮົາ ພວກເຂົາໄດ້ຍອມສຽງຊີວິດຂອງພວກເຂົາຫລາຍກວ່າທີ່ຈະບົວລະບັດ ແລະນະມັດສະການພະອື່ນໃດ
ນອກຈາກພຣະເຈົ້າຂອງພວກເຂົາເອງ.
[29]ເພາະສະນັ້ນເຮົາຈຶ່ງອອກຄຳສັ່ງວ່າ, ປະຊາຊົນ, ບໍ່ວ່າຊາດໃດ, ຫລືພາສາໃດ ທີ່ເວົ້າຫມິ່ນປະຫມາດພຣະເຈົ້າ ຂອງຊັດຣາກ, ເມຊາກ,
ແລະອາເບັດເນໂກ ຈະຕ້ອງຖືກຂ້າຢ່າງທາລຸນ ແລະບ້ານເຮືອນຂອງພວກເຂົາຈະຖືກເຮັດໃຫ້ເປັນກອງຂີ້ເຫຍື້ອ
ເພາະບໍ່ມີພະອື່ນໃດສາມາດຊ່ວຍກູ້ແບບນີ້ໄດ້."[30]ແລ້ວກະສັດກໍໄດ້ຊົງເລື່ອນຍົດໃຫ້ຊັດຣາກ, ເມຊາກ, ແລະອາເບັດເນໂກ
ໃຫ້ສູງຂຶ້ນອີກໃນເມືອງບາບີໂລນ.


generated on Tue Jun 17 19:01:42 2025

# 4

[1]ກະສັດເນບູກາດເນັດຊາໄດ້ສົ່ງສານໄປຍັງປະຊາຊົນທັງສິ້ນ, ທຸກໆປະຊາຊາດ, ແລະທຸກພາສາຊຶ່ງອາໄສຢູ່ເທິງແຜ່ນດິນໂລກວ່າ:
"ຂໍໃຫ້ຄວາມສຸກຄວາມຈະເລີນຮຸ່ງເຮືອງມີແດ່ທ່ານ.[2]ເຮົາໄດ້ເຫັນສົມຄວນທີ່ຈະບອກໃຫ້ພວກທ່ານເຖິງໝາຍສຳຄັນຕ່າງໆ
ແລະການອັດສະຈັນຕ່າງໆ ຊຶ່ງອົງຜູ້ສູງສຸດໄດ້ຊົງກະທຳແກ່ເຮົາເອງ.[3]ໝາຍສຳຄັນຂອງພຣະອົງຍິ່ງໃຫຍ່,
ແລະການອັດສະຈັນຂອງພຣະອົງມີອານຸພາບຫລາຍ! ຣາຊອານາຈັກຂອງພຣະອົງຄວນເປັນອານາຈັກນິຣັນ,
ແລະການປົກຄອງຂອງພຣະອົງນັ້ນຊົງດຳລົງຊົ່ວອາຍຸ."

[4]ເຮົາເອງ ເນບູກາດເນັດຊາ, ໄດ້ມີຊີວິດຢູ່ ຢ່າງມີຄວາມສຸກໃນນິເວດຂອງເຮົາ, ແລະມີຄວາມຍິນດີຢູ່ໃນພະຣາຊວັງ.
[5]ແຕ່ຄວາມຝັນທີ່ເຮົາໄດ້ຝັນເຫັນໄດ້ເຮັດໃຫ້ເຮົາຢ້ານກົວ. ຂະນະທີ່ເຮົານອນຢູ່ເທິງທີ່ນອນ
ເຮົາໄດ້ເຫັນແລະນິມິດເກີດຂຶ້ນໃນໃຈຂອງເຮົາໄດ້ລົບກວນຈິດໃຈຂອງເຮົາ.
[6]ດັ່ງນັ້ນເຮົາໄດ້ສັ່ງໃຫ້ເອີ້ນຄົນໃນບາບີໂລນທີ່ເປັນນັກປາດຂອງບາບີໂລນທັງສິ້ນມາຫາເຮົາ ເພື່ອພວກເຂົາຈະສາມາດແກ້ຄວາມຝັນໃຫ້ເຮົາ.
[7]ແລ້ວພວກຫມໍດູ ຄົນເຫລົ່ານັ້ນທີ່ອ້າງວ່າເວົ້າກັບຄົນຕາຍໄດ້, ນັກປາດ, ແລະບັນດາໂຫຣາຈານກໍໄດ້ມາເຂົ້າເຝົ້າເຮົາ.
ເຮົາກໍເລົ່າຄວາມຝັນແກ່ພວກເຂົາ, ແຕ່ພວກເຂົາບໍ່ສາມາດແກ້ຄວາມຝັນໃຫ້ເຮົາໄດ້.[8]ແຕ່ໃນທີ່ສຸດ ດານີເອນ ກໍໄດ້ເຂົ້າມາເຝົ້າເຮົາ ຄົນທີ່ມີຊື່ວ່າ
ເບນເຕຊັດຊາເຣ ຕາມຊື່ພະຂອງເຮົາ ແລະເຂົາມີວິນຍານຂອງ ພຣະເຈົ້າອົງບໍຣິສຸດ ແລະເຮົາກໍໄດ້ເລົ່າຄວາມຝັນໃຫ້ເຂົາຟັງວ່າ.
[9]"ເບັນເຕຊັດຊາເຣ, ຫົວຫນ້າຂອງພວກຫມໍດູເອີຍ, ເຮົາຮູ້ວ່າວິນຍານຂອງບັນດາພະບໍຣິສຸດຢູ່ນຳເຈົ້າ
ແລະບໍ່ມີຄວາມລຶກລັບໃດທີ່ຈະຍາກເກີນໄປສຳລັບເຈົ້າ. ຈົ່ງບອກເຮົາວ່າ ເຮົາໄດ້ເຫັນອັນໃດໃນຄວາມຝັນຂອງເຮົາ
ແລະມັນມີຄວາມຫມາຍວ່າຢ່າງໃດ.
[10]ເຫລົ່ານີ້ຄືນິມິດທີ່ເຮົາໄດ້ເຫັນໃນຈິດໃຈຂອງເຮົາເມື່ອນອນຢູ່ເທິງທີ່ນອນຄື: ເຮົາໄດ້ເຫັນ, ແລະໄດ້ມີຕົ້ນໄມ້ຕົ້ນຫນຶ່ງທ່າມກາງແຜ່ນດິນ,
ແລະມັນສູງຫລາຍ.[11]ຕົ້ນໄມ້ນັ້ນໄດ້ເຕີບໂຕແລະແຂງແຮງ. ຍອດຂອງມັນປົ່ງຂຶ້ນໄປຮອດຟ້າ,
ແລະສາມາດຈະເບິ່ງເຫັນມັນໄດ້ຈາກສຸດປາຍແຜ່ນດິນ.[12]ໃບຂອງມັນກໍງົດງາມ, ຫມາກຂອງມັນກໍອຸດົມສົມບູນ, ແລະຈາກຕົ້ນໄມ້ນັ້ນ
ມີອາຫານໃຫ້ແກ່ສິ່ງທີ່ມີຊີວິດທັງປວງ. ສັດໃນທ້ອງທົ່ງອາໄສກໍໄດ້ຢູ່ໃຕ້ຮົ່ມຂອງມັນ ບັນດານົກເທິງຟ້າກໍໄດ້ອາໄສຢູ່ກິ່ງກ້ານຂອງມັນ,
ແລະສິ່ງທີ່ມີຊີວິດທັງປວງກໍລ້ຽງຊີບຈາກມັນ.
[13]ເຮົາໄດ້ເຫັນໃນນິມິດຂອງເຮົາເມື່ອເຮົາຢູ່ເທິງບ່ອນນອນ, ແລະເຮົາໄດ້ເຫັນທູດຜູ້ບໍຣິສຸດອົງຫນຶ່ງໄດ້ລົງມາຈາກຟ້າ.
[14]ເຂົາໄດ້ເປັ່ງສຽງດັງແລະໄດ້ກ່າວວ່າ, 'ໂຄ່ນຕົ້ນໄມ້ນີ້ ແລະຕັດກິ່ງອອກເສຍ, ລິໃບອອກ ແລະໃຫ້ຫມາກຂອງມັນກະຈາຍໄປ
ໃຫ້ສັດປ່າຫນີໄປຈາກກ້ອງຕົ້ນໄມ້ ແລະໃຫ້ນົກຫນີໄປຈາກກິ່ງຂອງມັນ.
[15]ແຕ່ຈົ່ງປ່ອຍໃຫ້ຕໍຂອງຮາກຢູ່ໃນດິນ, ມີປອກເຫລັກແລະທອງສຳຣິດມັດໄວ້ ໃຫ້ຢູ່ທ່າມກາງຫຍ້າອ່ອນ, ໃນທົ່ງນາ ໃຫ້ປຽກນ້ຳຄ້າງຈາກຟ້າ.
ໃຫ້ມີຊີວິດຢູ່ກັບສັດປ່າຢູ່ທ່າມກາງຕົ້ນໄມ້ຕ່າງໆ ເທິງພື້ນດິນ.[16]ໃຫ້ຈິດໃຈຂອງເຂົາໄດ້ປ່ຽນຈາກຈິດໃຈຂອງມະນຸດໃຫ້ເປັນຈິດໃຈສັດປ່າ,
ແລະປ່ອຍໃຫ້ເປັນຢູ່ຢ່າງນັ້ນຈົນຄົບເຈັດປີ.
[17]ຄຳຕັດສິນໃຈນີ້ເປັນຄຳສັ່ງຂອງບັນດາທູດ ຄຳຕັດສິນນັ້ນເປັນຄຳຕັດສິນຂອງຜູ້ບໍຣິສຸດທັງຫລາຍ.
ຜູ້ທີ່ໄດ້ມີຊີວິດຢູ່ຈະໄດ້ຮູ້ວ່າພຣະອົງຜູ້ສູງສຸດຊົງປົກຄອງບັນດາຣາຊອານາຈັກຂອງປະຊາຊົນ
ແລະປະທານຣາຊອານາຈັກນັ້ນໃຫ້ແກ່ຜູ້ທີ່ພຣະອົງພໍໃຈ, ແມ່ນແຕ່ຜູ້ຕ່ຳຕ້ອຍທີ່ສຸດ.'[18]ຕົວເຮົາເອງ, ກະສັດເນບູກາດເນັດຊາ, ໄດ້ມີຄວາມຝັນນີ້
ບັດນີ້ເຈົ້າເອງ ເບັນເຕຊັດຊາເຣ, ເຈົ້າຈົ່ງບອກເຮົາກ່ຽວກັບການແກ້ຄວາມຝັນ ເພາະບໍ່ມີພວກຫນັກປາດທັງສິ້ນແຫ່ງຣາຊອານາຈັກຂອງເຮົາ.
ສາມາດໃຫ້ຄຳແກ້ຄວາມຝັນແກ່ເຮົາ ແຕ່ເຈົ້າສາມາດເຮັດໄດ້, ເພາະວິນຍານຂອງບັນດາພະບໍຣິສຸດຢູ່ໃນຕົວເຈົ້າ.“
[19]ແລ້ວດານີເອນ, ຜູ້ທີ່ມີຊື່ອີກຊື່ຫນຶ່ງວ່າເບັນເຕຊັດຊາເຣ, ກໍອຸກໃຈຢູ່ຂະນະຫນຶ່ງ, ແລະຄວາມຄິດຂອງພະອົງກໍເຮັດໃຫ້ພະອົງໄດ້ຕົກໃຈ.
ກະສັດໄດ້ກ່າວວ່າ, "ເບັນເຕຊັດຊາເຣ, ຢ່າໃຫ້ຄວາມຝັນຫລືຄຳແກ້ຄວາມຝັນເຮັດໃຫ້ເຈົ້າຕົກໃຈເລີຍ,“ເບັນເຕຊັດຊາເຣ ໄດ້ຕອບວ່າ,"
ເຈົ້ານາຍຂອງຂ້ານ້ອຍ, ຂໍໃຫ້ຄວາມຝັນນັ້ນເປັນຂອງບັນດາຜູ້ທີ່ກຽດຊັງພະອົງເຖີດ;
ແລະຂໍໃຫ້ຄຳແກ້ຄວາມຝັນນັ້ນຕົກແກ່ພວກສັດຕູຂອງພະອົງ.
[20]ຕົ້ນໄມ້ທີ່ພະອົງໄດ້ເຫັນ ຊຶ່ງໄດ້ເຕີບໂຕຂຶ້ນ, ແລະແຂງແຮງ ແລະໄດ້ປົ່ງຍອດຂຶ້ນໄປເທິງຟ້າ, ແລະຊຶ່ງສາມາດເບິ່ງເຫັນໄດ້ຈາກສຸດປາຍຂອງ
ແຜ່ນດິນ.[21]ເຫລົ່າໃບກໍງົດງາມ, ແລະຫມາກກໍອຸດົມສົມບູນ, ດັ່ງນັ້ນຈາກຕົ້ນໄມ້ນັ້ນມີອາຫານໃຫ້ແກ່ສິ່ງທີ່ມີຊີວິດທັງປວງ,
ແລະສັດໃນທ້ອງທົ່ງອາໄສຢູ່ໃນຮົ່ມໄມ້, ແລະບັນດານົກເທິງຟ້າກໍອາໄສຢູ່.[22]ຂ້າແດ່, ກະສັດ, ຕົ້ນໄມ້ນີ້ຄືພະອົງເອງ
ຜູ້ໄດ້ຊົງຈະເລີນຂຶ້ນຢ່າງເຂັ້ມແຂງ, ແລະຄວາມຍິ່ງໃຫຍ່ຂອງພະອົງໄດ້ຈະເລີນຂຶ້ນໄປເຖິງຟ້າ,
ແລະອຳນາດສິດຂາດຂອງພະອົງກໍໄດ້ໄປເຖິງສຸດປາຍແຜ່ນດິນ.
[23]ທີ່ພຣະອົງ, ກະສັດ, ໄດ້ຊົງແນມເຫັນທູດຜູ້ບໍຣິສຸດລົງມາຈາກຟ້າແລະໄດ້ເວົ້າວ່າ, ‘ຈົ່ງຕັດຕົ້ນໄມ້ນີ້ລົງແລະທຳລາຍເສຍ,
ແຕ່ຈົ່ງປ່ອຍໃຫ້ຕໍຂອງຮາກຢູ່ໃນດິນ, ມີປອກເຫລັກແລະທອງສຳລິດມັດໄວ້, ໃຫ້ຢູ່ທ່າມກາງຫຍ້າອ່ອນໃນທົ່ງນາ. ໃຫ້ປຽກນ້ຳຄ້າງຈາກຟ້າ.
ໃຫ້ຢູ່ຮ່ວມກັບສັດໃນທ້ອງທົ່ງ ແລະປ່ອຍໃຫ້ຢູ່ຢ່າງນັ້ນຈົນຄົບເຈັດປີ.’
[24]ຂ້າແດ່ກະສັດ, ນີ້ເປັນຄຳແກ້ຄວາມຝັນແມ່ນຄວາມຫມາຍມາຈາກ ອົງຜູ້ສູງສຸດ ຊຶ່ງມາເຖິງພະອົງ, ກະສັດເຈົ້ານາຍຂອງຂ້ານ້ອຍວ່າ.
[25]ພະອົງຈະຊົງຖືກຂັບໄລ່ໄປຈາກທ່າມກາງມະນຸດ, ແລະພະອົງຈະຢູ່ກັບສັດໃນທ້ອງທົ່ງ. ພະອົງຈະຕ້ອງກິນຫຍ້າຢ່າງກັບງົວ,
ແລະຕ້ອງປຽກນ້ຳຄ້າງຈາກຟ້າ ແລະຊົງເປັນຢູ່ຢ່າງນັ້ນຈົນຄົບເຈັດປີ ຈົນກວ່າພະອົງຈະຊົງຮູ້ວ່າ
ອົງຜູ້ສູງສຸດນັ້ນຊົງປົກຄອງຣາຊອານາຈັກຂອງປະຊາຊົນ ແລະພຣະອົງຈະປະທານຣາຊອານາຈັກນັ້ນແກ່ຜູ້ທີ່ພຣະອົງພໍໃຈ.
[26]ແລະທີ່ຊົງບັນຊາໃຫ້ເຫລືອຕໍຂອງຮາກຕົ້ນນັ້ນໄວ້, ໃນທາງນີ້ ຣາຊອານາຈັກຈະກັບມາເປັນຂອງພະອົງ
ນັບຕັ້ງແຕ່ເມື່ອພະອົງຊົງຍອມຮັບວ່າການປົກຄອງນັ້ນເປັນຂອງຟ້າ.[27]ຂ້າແດ່ກະສັດ, ດັ່ງນັ້ນຂໍຊົງຮັບຄຳແນະນຳຂອງຂ້ານ້ອຍ ຂໍພຣະອົງ,

 generated on Tue Jun 17 19:01:42 2025

ຊົງເລີກເຮັດບາບເສຍໂດຍການທຳຄວາມຊອບທຳແລະເລີກເຮັດບາບຊົ່ວ. ໂດຍການສຳແດງຄວາມກະລຸນາຕໍ່ຜູ້ຖືກບີບບັງຄັບ,
ແລະບາງທີຄວາມຮຸ່ງເຮືອງຂອງພຣະອົງອາດຈະຂະຫຍາຍອອກໄປອີກໄດ້."
[28]ສິ່ງເຫລົ່ານີ້ທັງຫມົດໄດ້ເກີດຂຶ້ນແກ່ກະສັດເນບູກາດເນັດຊາ.[29]ຕໍ່ມາອີກສິບສອງເດືອນ
ພະອົງໄດ້ຊົງດຳເນີນຢູ່ເທິງດາດຟ້າພະຣາຊວັງທີ່ບາບີໂລນ,[30]ແລະພຣະອົງໄດ້ກ່າວວ່າ, “ນີ້ບໍ່ແມ່ນບາບີໂລນ, ອັນຍິ່ງໃຫຍ່
ຊຶ່ງເຮົາໄດ້ສ້າງໄວ້ດ້ວຍອຳນາດໃຫຍ່ຍິ່ງຂອງເຮົາ, ໃຫ້ເປັນພະຣາຊຖານແລະເພື່ອເປັນສັກສີອັນສູງສົ່ງຂອງເຮົາບໍ? “
[31]ຂະນະທີ່ຖ້ອຍຄຳຂອງພະອົງຍັງຢູ່ທີ່ຮີມສົບປາກຂອງກະສັດ, ກໍມີສຽງມາຈາກທ້ອງຟ້າວ່າ: “ໂອ ກະສັດເນບູກາດເນັດຊາ,
ນີ້ເປັນປະກາດແກ່ເຈົ້າວ່າ ຣາຊອານາຈັກໄດ້ພາກໄປຈາກເຈົ້າແລ້ວ.[32]ເຈົ້າຈະຖືກຂັບໄລ່ໄປຈາກປະຊາຊົນ,
ແລະບ້ານຂອງເຈົ້າຈະຢູ່ກັບສັດໃນທ້ອງທົ່ງ. ເຈົ້າຈະຕ້ອງກິນຫຍ້າຢ່າງກັບງົວ. ຈະເປັນຢູ່ຢ່າງນັ້ນຈົນຄົບເຈັດປີ ຈົນກວ່າເຈົ້າຈະໄດ້ຮຽນຮູ້ໄດ້ວ່າ
ອົງຜູ້ສູງສຸດຊົງປົກຄອງບັນດາຣາຊອານາຈັກຂອງປະຊາຊົນ ແລະປະທານຣາຊອານາຈັກເຫລົ່ານັ້ນແກ່ຜູ້ທີ່ພຣະອົງພໍໃຈ.”
[33]ພຣະຣາຊກິດນີ້ມີຜົນຕໍ່ ເນບູກາດເນັດຊາຢ່າງທັນທີ. ພະອົງຊົງໄດ້ຖືກຂັບໄລ່ໄປຈາກທ່າມກາງປະຊາຊົນ. ພະອົງໄດ້ກິນຫຍ້າຢ່າງກັບງົວ,
ແລະຮ່າງກາຍກໍໄດ້ຊຸ່ມປຽກນ້ຳຄ້າງຈາກຟ້າ. ຜົມຂອງພະອົງກໍໄດ້ຊົງງອກຍາວຢ່າງກັບຂົນນົກອິນຊີ, ແລະເລັບຂອງພະອົງກໍເຫມືອນເລັບນົກ
[34]ເມື່ອສິ້ນສຸດວາລະນັ້ນແລ້ວ ຕົວເຮົາເອງ, ເນບູກາດເນັດຊາ, ກໍຊົງເງີຍຫນ້າເບິ່ງທ້ອງຟ້າ ແລະຈິດໃຈຂອງເຮົາກໍໄດ້ກັບຄືນເປັນປົກກະຕິ,
"ເຮົາກໍໄດ້ຮ້ອງສັນລະເສີນແດ່ອົງຜູ້ສູງສຸດນັ້ນ, ແລະສັນລະເສີນຖວາຍພຣະກຽດແດ່ພຣະອົງ. ຜູ້ດຳລົງຢູ່ເປັນນິດເພາະການປົກຄອງນິລັນດອນ,
ແລະຣາຊອານາຈັກຂອງພຣະອົງດຳລົງຢູ່ທຸກຊົ່ວອາຍຸ.
[35]ພຣະອົງຊົງຖືວ່າຊາວແຜ່ນດິນໂລກທັງຫມົດນັ້ນເປັນຄົນທີ່ໄຮ້ຄ່າ; ພຣະອົງຊົງເຮັດຕາມຊອບໃຈທ່າມກາງກອງທັບແຫ່ງຟ້າ
ແລະທ່າມກາງຊາວແຜ່ນດິນໂລກຕາມທີ່ພຣະອົງຊົງຊອບໃຈ. ບໍ່ມີຜູ້ໃດຢັບຢັ້ງມືຂອງພຣະອົງ, ໄດ້ ຫລືທູນຖາມພຣະອົງໄດ້ວ່າ
“ເປັນຫຍັງຈຶ່ງຊົງເຮັດເຊັ່ນນີ້?”'
[36]ໃນເວລາດຽວກັນທີ່ຈິດໃຈຂອງເຮົາກໍກັບຄືນເປັນປົກກະຕິ, ຄວາມສູງສົ່ງແລະສະຫງ່າຣາສີກັບມາສູ່ເຮົາອີກ
ເພື່ອສັກສີແຫ່ງຣາຊອານາຈັກຂອງເຮົາ. ບັນດາອົງຄະມົນຕີແລະບັນດາຣາຊວົງກໍໄດ້ສະແຫວງຫາຄວາມເມດຕາຂອງເຮົາ. ບັນລັງຂອງເຮົາ
ກໍໄດ້ກັບຄືນມາ, ແລະຄວາມຍິ່ງໃຫຍ່ກັບເພີ່ມພູນແກ່ເຮົາຂຶ້ນອີກ.[37]ບັດນີ້ ເຮົາເອງ, ເນບູກາດເນັດຊາ, ຂໍສັນລະເສີນ, ຍົກຍ້ອງ,
ແລະຖວາຍກຽດແດ່ອົງກະສັດແຫ່ງຟ້າ, ເພາະວ່າພຣະຣາຊກິດຂອງພຣະອົງຖືກຕ້ອງ, ແລະການກະທຳຂອງພຣະອົງກໍທ່ຽງທຳ.
ພຣະອົງຊົງເຮັດໃຫ້ບັນດາຜູ້ດຳເນີນຢູ່ໃນຄວາມຈອງຫອງໄດ້ຖ່ອມຕົວເອງ.

 generated on Tue Jun 17 19:01:42 2025

5 1ກະສັດເບັນຊັດຊາເຣ ໄດ້ຊົງຈັດງານລ້ຽງໃຫຍ່ແກ່ບັນດາເຊື້ອວົງຫນຶ່ງພັນຄົນ, ແລະພະອົງໄດ້ດື່ມເຫລົ້າອາງຸ່ນຕໍ່ຫນ້າຄົນຫນຶ່ງພັນຄົນນັ້ນ.
2ຂະນະທີ່ ເບັນຊັດຊາເຣໄດ້ດື່ມເຫລົ້າອະງຸ່ນແລ້ວ,
ພະອົງໄດ້ຊົງສັ່ງໃຫ້ນຳພາຊະນະທອງຄຳແລະເງິນຊຶ່ງເນບູກາດເນັດຊາບິດາຂອງພະອົງໄດ້ຊົງຍຶດມາຈາກພຣະວິຫານໃນກຸງເຢຣູຊາເລັມ,
ອອກມາໃຫ້ບັນດາເຊື້ອວົງ, ຂອງພະອົງ, ແລະມະເຫສີ ແລະນາງສະຫນົມເພື່ອໃຊ້ໃສ່ເຫລົ້າອະງຸ່ນດື່ມ.

3ພວກຄົນໃຊ້ຈຶ່ງໄດ້ນຳພາຊະນະທອງຄຳຊຶ່ງຍຶດມາຈາກພຣະວິຫານ, ຄືພຣະນິເວດຂອງພຣະເຈົ້າ, ໃນນະຄອນເຢຣູຊາເລັມ. ອອກມາ
ແລະກະສັດ, ແລະບັນດາເຊື້ອວົງຂອງພະອົງທັງມະເຫສີ, ແລະນາງສະຫນົມກໍໄດ້ດື່ມຈາກພະຊະນະເຫລົ່ານັ້ນ. 4ພວກເຂົາໄດ້ດື່ມເຫລົ້າອະງຸ່ນ
ແລະສັນເສີນຮູບເຄົາລົບທັງຫລາຍທີ່ເຮັດດ້ວຍທອງຄຳ, ເງິນ, ທອງສຳຣິດ, ເຫລັກ, ໄມ້, ແລະຫີນ.
5ໃນທັນໃດນັ້ນ ມີນິ້ວມືຄົນຫລາຍນິ້ວໄດ້ປະກົດຂຶ້ນ
ແລະໄດ້ຂຽນລົງທີ່ຝາພະຣາດຊະວັງຂອງກະສັດຫນ້າຂາຕັ້ງຕະກຽງແລະກະສັດໄດ້ຊົງເຫັນສ່ວນຫນຶ່ງຂອງມືທີ່ຂຽນນັ້ນ.
6ແລ້ວຫນ້າຂອງກະສັດກໍຊີດໄປ, ແລະ ພະອົງກໍຕົກໃຈ ຈົນກະທັ້ງພະເພົາຊົງອ່ອນເພຍ ຂາກໍຊົງສັ່ນ.
7ກະສັດໄດ້ຊົງມີລັບສັ່ງສຽງດັງໃຫ້ນຳຄົນເຫລົ່ານັ້ນທີ່ອ້າງວ່າເວົ້າກັບຄົນຕາຍໄດ້, ເຫລົ່ານັກປາດ, ແລະເຫລົ່າໂຫລາສາດ. ເຂົ້າມາເຝົ້າ
ກະສັດໄດ້ກ່າວກັບຄົນເຫລົ່ານັ້ນທີ່ມີຊື່ສຽງ ວ່າເປັນຄົນມີປັນຍາຂອງບາບີໂລນວ່າ,
"ຜູ້ໃດກໍຕາມທີ່ອະທິບາຍສິ່ງທີ່ຂຽນໄວ້ນີ້ແລະແປຄວາມຫມາຍໃຫ້ເຮົາໄດ້ ເຮົາຈະໃຫ້ຜູ້ນັ້ນສວມເສື້ອສີມ່ວງແລະສວມສາຍຄໍທອງຄຳຮອບຄໍ
ເຂົາ ແລະເຮົາຈະຕັ້ງໃຫ້ເປັນຜູ້ມີອຳນາດໃນຣາດຊະອານາຈັກຂອງເຮົາ."
8ແລ້ວພວກນັກປຶກສາຂອງກະສັດກໍເຂົ້າມາທັງຫມົດ ແຕ່ພວກເຂົາບໍ່ສາມາດອ່ານຂໍ້ຂຽນ ຫລືແປຄວາມຫມາຍໃຫ້ກະສັດໄດ້.
9ແລ້ວກະສັດເບັນຊັດຊາເຣ ຊົງຕົກໃຈຢ່າງຫລາຍ ແລະຫນ້າຂອງພຣະອົງກໍໄດ້ຊີດໄປ.
ບັນດາເຊື້ອວົງທັງຫລາຍຂອງພະອົງກໍໄດ້ວຸ້ນວາຍບໍ່ຮູ້ວ່າຈະເຮັດຢ່າງໃດ.
10ບັດນີ້ ພະຣາຊີນີໄດ້ເຂົ້າມາໃນງານລ້ຽງ ເພາະໄດ້ຍິນຖ້ອຍຄຳຂອງກະສັດແລະເຈົ້ານາຍທັງຫລາຍ ແລະພະຣາຊີນີໄດ້ກ່າວວ່າ,
"ຂ້າແດ່ກະສັດ, ຂໍຊົງພຣະຈະເລີນເປັນນິດ! ຂໍພຣະອົງຢ່າໄດ້ຊົງຕົກໃຈ ຫລືໃຫ້ຫນ້າຂອງພຣະອົງຊີດໄປເລີຍ.
11ໃນອານາຈັກຂອງພະອົງມີຜູ້ຊາຍຄົນຫນຶ່ງມີວິນຍານຂອງບັນດາອົງຜູ້ບໍຣິສຸດໃນຕົວເຂົາ. ໃນສະໄຫມຣັດຊະການຂອງເນບູກາດເນັດຊາ
ບິດາຂອງພະອົງ, ຄວາມສະຫວ່າງ ແລະຄວາມເຂົ້າໃຈແລະປັນຍາເຫມືອນເປັນຍາຂອງບັນດາພຣະທັງຫລາຍໄດ້ພົບໃນຕົວຜູ້ຊາຍຄົນນີ້.
ກະສັດເນບູກາດເນັດຊາ, ບິດາຂອງພະອົງ ໄດ້ຊົງແຕ່ຕັ້ງໃຫ້ເຂົາເປັນຫົວຫນ້າຄົນເຫລົ່ານັ້ນທີ່ອ້າງວ່າເວົ້າກັບຄົນຕາຍໄດ້, ເຫລົ່ານັກປາດ,
ແລະເຫລົ່າໂຫລາສາດ. 12ເຂົາມີວິນຍານເລີດ, ມີຄວາມຮູ້, ຄວາມເຂົ້າໃຈທີ່ຈະແກ້ຄວາມຝັນ, ແກ້ປິດສະຫນາ ແລະ ແກ້ປັນຫາຕ່າງໆ ເຂົາຄື
ດານີເອນ, ຊຶ່ງກະສັດໄດ້ປະທານນາມວ່າ ເບັນເຕຊັດຊາເຣ. ບັດນີ້ ຂໍຊົງ ຮ້ອງດານີເອນມາ
ແລະເຂົາຈະແປຄວາມຫມາຍຂອງສິ່ງທີ່ໄດ້ຂຽນໄວ້ນັ້ນຖວາຍພະອົງ."
13ແລ້ວດານີເອນຈຶ່ງໄດ້ຖືກນຳໃຫ້ເຂົ້າເຝົ້າຕໍ່ຫນ້າຂອງກະສັດ. ກະສັດໄດ້ກ່າວຖາມດານີເອນວ່າ, "ເຈົ້າຄື ດານີເອນ,
ຄົນນັ້ນໃນພວກທີ່ຖືກກວດເປັນຊະເລີຍມາຈາກຢູດາຍ, ທີ່ກະສັດພໍ່ຂອງເຮົານຳມາຈາກຢູດາ. 14ເຮົາໄດ້ຍິນວ່າເຈົ້າ,
ມີວິນຍານຂອງບັນດາພຣະໃນຕົວເຈົ້າ, ແລະເຈົ້າມີຄວາມສະຫວ່າງ ຄວາມເຂົ້າໃຈ ແລະປັນຍາເລີດໃນຕົວ.
15ພວກນັກປຶກສາແລະຄົນເຫລົ່ານັ້ນທີ່ອ້າງວ່າເວົ້າກັບຄົນຕາຍໄດ້ ໄດ້ຖືກເອີ້ນມາຕໍ່ຫນ້າເຮົາໃຫ້ອ່ານຂໍ້ຄວາມນີ້ແລະແປຄວາມຫມາຍໃຫ້ເຮົາ,
ແຕ່ພວກເຂົາບໍ່ສາມາດແປຄວາມຫມາຍຂອງເລື່ອງລາວນີ້ໄດ້. 16ເຮົາໄດ້ຍິນວ່າເຈົ້າສາມາດແປຄວາມຫມາຍແລະແກ້ປັນຫາໄດ້.
ບັດນີ້ຖ້າເຈົ້າສາມາດອ່ານຂໍ້ຄວາມແລະແປຄວາມຫມາຍໃຫ້ໄດ້, ເຈົ້າຈະໄດ້ສວມເສື້ອສີມ່ວງ, ແລະສວມສາຍຄໍທອງຄຳຮອບຄໍຂອງເຈົ້າ
ແລະເປັນຜູ້ມີອຳນາດໃນຣາຊອານາຈັກ."
17ແລ້ວດານີເອນໄດ້ທູນກະສັດວ່າ, "ຂໍຊົງເກັບຂອງພະຣາຊທານໄວ້ເປັນຂອງພະອົງເຖີດ, ແລະຂໍປະທານລາງວັນແກ່ຜູ້ອື່ນ,
ສ່ວນຂ້ານ້ອຍຈະຂໍອ່ານຂໍ້ຂຽນຖວາຍ, ກະສັດ, ແລະຖວາຍຄຳແປຄວາມຫມາຍໃຫ້ພະອົງຊົງຮູ້. 18ຂ້າແດ່ພະອົງ, ຜູ້ຊົງເປັນກະສັດ, ຊົງເປັນ
ພຣະເຈົ້າຜູ້ສູງສຸດໄດ້ປະທານຣາຊອານາຈັກ, ຄວາມຍິ່ງໃຫຍ່, ສັກສີ, ແລະບາຣາມີແກ່ ເນບູກາດເນັດຊາ ບິດາຂອງພະອົງ.
19ເພາະຄວາມຍິ່ງໃຫຍ່ຊຶ່ງພຣະເຈົ້າໄດ້ປະທານແກ່ເນບູກາດເນັດຊາ, ຊົນທຸກຊາດ, ແລະທຸກພາສາ, ຈຶ່ງໄດ້ສັ່ນສະທ້ານແລະເກງຂາມພະອົງ
ພະອົງຈະຊົງປະຫານຜູ້ໃດທີ່ຊົງປະສົງກໍໄດ້ຊົງປະຫານເສຍຈະຊົງໃຫ້ຜູ້ໃດດຳລົງຊີວິດຢູ່ກໍຊົງໃຫ້ດຳລົງຊີວິດ ຈະຊົງແຕ່ງຕັ້ງຜູ້ໃດກໍຊົງແຕ່ງຕັ້ງ,
ແລະຈະເຮັດໃຫ້ຜູ້ໃດຕ່ຳຕ້ອຍລົງກໍຊົງເຮັດຕາມທີ່ພຣະອົງຊົງຕ້ອງການ
20ແຕ່ເມື່ອເພິ່ນມີໃຈຈອງຫອງຂຶ້ນ ແລະໃຈແຂງກະດ້າງໂຫດຮ້າຍຈຶ່ງໄດ້ຊົງປະກອບກິດດ້ວຍຄວາມຫຶກເຫີມ
ພຣະເຈົ້າຈຶ່ງໄດ້ຊົງຖອດເພິ່ນຈາກຣາຊບັນລັງ, ແລະພວກເຂົາໄດ້ຮິບສັກສີຂອງເພິ່ນໄປ. 21ເພິ່ນຖືກຂັບໄລ່ອອກໄປຈາກທ່າມກາງສັງຄົມມະນຸດ
ເພິ່ນຊົງມີໃຈເປັນເຫມືອນໃຈສັດປ່າ, ແລະເພິ່ນອາໄສຢູ່ທ່າມກາງລໍປ່າ ກິນຫຍ້າເຫມືອນງົວ
ຮ່າງກາຍຂອງເພິ່ນກໍຊົງປຽກນ້ຳຄ້າງຈາກຟ້າຈົນກວ່າຈະຊົງສຳນຶກວ່າພຣະເຈົ້າສູງສຸດຊົງປົກຄອງຣາຊອານາຈັກຂອງປະຊາຊົນແລະຊົງແຕ່ງຕັ້ງຜູ້ໃດກໍຕາມທີ່ພຣະອົ
22ຂ້າແດ່ເບັນຊັດຊາເຣ, ພະອົງຊົງເປັນພະໂອລົດ ແມ່ນພະອົງໄດ້ຊົງຮູ້ສິ່ງເຫລົ່ານີ້ແລ້ວ ກໍບໍ່ໄດ້ຖ່ອມໃຈຂອງພະອົງ.
23ແຕ່ກັບຊົງຍົກພະອົງເອງຂຶ້ນສູ້ກັບອົງພຣະຜູ້ເປັນເຈົ້າແຫ່ງຟ້າ.
ແລະຊົງໃຫ້ນຳພາຊະນະແຫ່ງພຣະວິຫານຂອງພຣະອົງມາຕໍ່ຫນ້າຂອງພຣະອົງແລ້ວພະອົງເອງ, ພວກເຈົ້ານາຍຂອງພະອົງ, ທັງມະເຫສີ,
ແລະນາງສະຫນົມຂອງພະອົງກໍດື່ມເຫລົ້າອະງຸ່ນຈາກພາຊະນະຫລົ່ານັ້ນ ແລະພະອົງໄດ້ຊົງສັນລະເສີນຮູບເຄົາຣົບທີ່ເຮັດດ້ວຍເງິນ, ທອງຄຳ,
ທອງສຳລິດ, ເຫລັກ ໄມ້ ແລະຫີນ, ຊຶ່ງຈະເບິ່ງຫລືຟັງຫລືເຂົ້າໃຈກໍບໍ່ໄດ້ ແຕ່ພະອົງບໍ່ໄດ້ຖວາຍພຣະກຽດແດ່ພຣະເຈົ້າ
ຜູ້ຊຶ່ງລົມປານຂອງພຣະອົງຢູ່ໃນມືຂອງພຣະອົງ ແລະທາງທັງຫມົດຂອງພຣະອົງກໍຂຶ້ນຢູ່ກັບພຣະອົງ.
24ແລ້ວພຣະເຈົ້າໄດ້ຊົງສົ່ງມືຈາກເບື້ອງຫນ້າພຣະອົງ ແລະຂຽນຂໍ້ຄວາມກໍໄດ້ຖືກຈາເລິກໄວ້.
25ຕໍ່ໄປນີ້ເປັນຂໍ້ຂຽນທີ່ຈາລຶກໄວ້ຄື: 'ເມເນ, ເມເນ, ເທເກ, ແລະຟາຣຊິນ.' 26ຕໍ່ໄປນີ້ເປັນຄຳແປຂໍ້ຄວາມນັ້ນ'ເມເນ,'
'ພຣະເຈົ້າໄດ້ຊົງຄຳນວນວາລະສິ້ນສຸດແຫ່ງຣາຊອານາຈັກຂອງພະອົງໄວ້ແລ້ວ,' 27ເທເກ' 'ພຣະອົງໄດ້ຊົງຖືກຊັ່ງໃນຕາຊູ
ແລະໄດ້ຊົງພົບວ່າຍັງຂາດຢູ່' 28ເປເຣດ' 'ຣາຊອານາຈັກຂອງພຣະອົງໄດ້ຖືກແບ່ງອອກໃຫ້ແກ່ຄົນມີເດຍແລະຄົນເປີເຊຍ"'

[29]ແລ້ວເຈົ້າເບັນຊັດຊາເຣກໍໄດ້ຊົງມີພະບັນຊາແລະພວກເຂົາກໍໄດ້ສວມເສື້ອຜ້າສີມ່ວງມານຸ່ງໃຫ້ ດານີເອນທັນທີ
ສາຍຄໍທອງຄຳກໍໄດ້ສວມຮອບຄໍຂອງເຂົາ ແລະກະສັດໄດ້ຊົງຈັດກຽດຕິຍົດກ່ຽວກັບເຂົາວ່າ
ເຂົາໄດ້ແຕ່ງຕັ້ງແລະມີອຳນາດຫນ້າທີ່ເປັນຜູ້ມີອຳນາດໃນຣາຊອານາຈັກ[30]ໃນຄືນວັນນັ້ນເອງ
ເບັນຊັດຊາເຣກະສັດຄົນບາບີໂລນກໍໄດ້ຊົງຖືກສັງຫານ[31]ແລະດາຣິອຸດຊາວເມເດຍກໍໄດ້ຊົງຮັບຣາຊອານາຈັກ
ຂະນະເມື່ອພະອົງຊົງມີຊີວິດມາຢູ່ປະມານຫົກສິບສອງພັນສາ.


generated on Tue Jun 17 19:01:42 2025

# 6

[1]ກະສັດດາຣິອຸດ ໄດ້ຊົງແຕ່ງຕັ້ງຜູ້ວ່າຣາຊການແຄວັນຈຳນວນ120ຄົນ ເພື່ອໃຫ້ປົກຄອງທົ່ວຣາຊອານາຈັກ.
[2]ແລະຊົງຕັ້ງສາມຄົນຢູ່ເຫນືອພວກຜູ້ວ່າການແຄວັນແລະດານີເອນເປັນຄົນຫນຶ່ງທີ່ຈະຮັບລາຍງານຈາກຜູ້ວ່າຣາຊການແຄວັນ
ເພື່ອກະສັດຈະບໍ່ຂາດປະໂຫຍດ[3]ດານີເອນກໍໄດ້ມີຊື່ສຽງຄົນອື່ນໆ ແລະຜູ້ວ່າຣຊາການແຄວັນທັງຫລາຍ
ເພາະວ່າເຂົາໄດ້ມີວິນຍານສະຖິດກັບເຂົາ ກະສັດຊົງມີແຜນຈະແຕ່ງຕັ້ງໃນເຂົາດູແລອານາຈັກເຫລົ່ານັ້ນທັງຫມົດ

[4]ຜູ້ວ່າການແຄວັນທັງຫລາຍຈຶ່ງໄດ້ຫາຄວາມຜິດໃນງານທີ່ ດານີເອນ ເຮັດໃນເລື່ອງຣາຊອານາຈັກ
ແຕ່ພວກເຂົາກໍຫາຄວາມຜິດຫລືຄວາມບົກຜ່ອງໃນງານຂອງເຂົາບໍ່ໄດ້
ເພາະເຂົາເປັນຄົນຊື່ສັດຈະຫາຄວາມຜິດພາດຫລືເຊື່ອມເສຍໃນໂຕເຂົາບໍ່ໄດ້ເລີຍ[5]ແລ້ວຄົນເຫລົ່ານີ້ຈຶ່ງໄດ້ເວົ້າກັນວ່າ,
"ພວກເຮົາບໍ່ສາມາດຈະຟ້ອງດານີເອນໄດ້ ນອກຈາກເຮົາຈະຫາເຫດຜົນໃນເລື່ອງກົດບັນຍັດແຫ່ງພຣະເຈົ້າຂອງເຂົາ."
[6]ແລ້ວພວກອະທິບໍດີແລະພວກຜູ້ວ່າຣາຊການ ແຄວັນເຫລົ່ານີ້ກໍໄດ້ນຳແຜນຖວາຍຕໍ່ຫນ້າກະສັດ, ພວກເຂົາໄດ້ກ່າວວ່າ,
"ຂ້າແຕ່ກະສັດດາຣິອຸດ, ຂໍຊົງພຣະຈະເລີນເປັນນິດ![7]ຜູ້ວ່າຣາຊການທຸກຄົນແຫ່ງຣາຊອານາຈັກ, ທັງເຫລົ່າອົງຄະມົນຕີ,
ແລະເຫລົ່າຜູ້ວ່າຣາຊການແຄວັນ ເຫລົ່າທີ່ປຶກສາ ແລະຜູ້ວ່າຣາຊການທັງຫມົດໄດ້ຫາລືຮ່ວມກັນແລະໄດ້ມີມາຕິວ່າ ກະສັດ,
ຄວນຈະມີກົດຫມາຍແລະອອກຄຳສັ່ງແລະໃຫ້ມີຜົນໃຊ້ບັງຄັບທັນທີວ່າ ໃນສາມສິບວັນນີ້
ຢ່າໃຫ້ຜູໃດພາວັນນາອະຖານພຣະຫລືມະນຸດນອກເຫນືອຈາກພະອົງ ຂ້າແຕ່, ກະສັດ, ກໍໃຫ້ໂຍນຄົນນັ້ນລົງໃນຖ້ຳສິງໂຕ
[8]ບັດນີ້, ຂ້າແຕ່ກະສັດ, ຂໍພຣະອົງຊົງອອກຄຳສັ່ງນີ້ແລະຊົງເຊັນລົງນາມໃນຫນັງສືຫມາຍສຳຄັນ ເພື່ອຈະປ່ຽນແປງບໍ່ໄດ້
ຕາມກົດຫມາຍຂອງຄົນເມເດຍແລະຄົນເປີເຊຍ."[9]ດັ່ງນັ້ນ ກະສັດດາຣິອຸດຈຶ່ງໄດ້ລົງນາມໃນຫນັງສືສຳຄັນແລະໃຫ້ຄຳສັ່ງນັ້ນເປັນກົດຫມາຍ.
[10]ເມື່ອດານີເອນໄດ້ຮູ້ວ່າກະສັດລົງນາມໃນເອກກະສານເປັນກົດຫມາຍແລ້ວເຂົາກໍໄດ້ກັບບ້ານຂອງເຂົາ
(ບັດນີ້ປ່ອງຢ້ຽມຂອງເຂົາໄດ້ເປີດທີ່ຫ້ອງຊັ້ນເທິງຫັນຫນ້າໄປຍັງກຸງເຢລູຊາເລັມ) ແລະເຂົາກໍໄດ້ຄຸເຂົ່າລົງເຂົາໄດ້ເຮັດວັນລະສາມຄັ້ງ,
ແລະໄດ້ອະທິຖານແລະຂອບພຣະຄຸນ ພຣະເຈົ້າ, ຂອງເຂົາຢ່າງທີ່ໄດ້ເຄີຍເຮັດກ່ອນຫນ້ານີ້.
[11]ແລ້ວພວກຄົນເຫລົ່ານັ້ນທີ່ໄດ້ວາງແຜນດ້ວຍກັນໄດ້ເຫັນ ດານີເອນກຳລັງອະທິຖານແລະຂໍການຊ່ວຍເຫລືອຈາກພຣະເຈົ້າ.
[12]ແລ້ວພວກເຂົາກໍໄດ້ໄປເຂົ້າເຝົ້າກະສັດແລະໄດ້ບອກພຣະອົງກ່ຽວກັບຫນັງສືຄຳສັ່ງວ່າ,"ຂ້າແດ່ພະຣາຊາພະອົງໄດ້ຊົງລົງນາມໃນຫນັງສືສຳຄັນສະບັບຫນຶ່ງບໍ່ແມ່ນ
ຖ້າມີໃຜທູນຂໍຕໍ່ພຣະ ຫລືມະນຸດພາຍໃນສາມສິບວັນນີ້, ນອກເຫນືອຈາກພະອົງ, ຂ້າແດ່ກະສັດ, ກໍໃຫ້ໂຍນຄົນນັ້ນລົງໃນຖ້ຳຂອງພວກສິງໂຕ?"
ກະສັດໄດ້ກ່າວຕອບວ່າ, "ເລື່ອງນັ້ນຍັງຄົງຢູ່ ຕາມກົດຫມາຍຂອງຄົນເມດາຍແລະຄົນເປີເຊຍ ຊຶ່ງຈະແກ້ໄຂບໍ່ໄດ້ເປັນອັນຂາດ."
[13]ແລ້ວພວກເຂົາຈຶ່ງໄດ້ບອກຕໍ່ກະສັດວ່າ."ຂ້າແດ່ກະສັດ ດານີເອນ, ຄົນນັ້ນແຫລະທີ່ເປັນຄົນຫນຶ່ງໃນພວກທີ່ຖືກກວາດເປັນຊະເລີຍຈາກຢູດາ,
ບໍ່ໄດ້ເຊື່ອຟັງພຣະອົງ, ແລະບໍ່ເຊື່ອຟັງຄຳສັ່ງຊຶ່ງພຣະອົງໄດ້ລົງນາມໄວ້, ເຂົາໄດ້ທູນຂໍຕໍ່ພຣະເຈົ້າ
ຂອງເຂົາວັນລະສາມຄັ້ງ."[14]ເມື່ອກະສັດໄດ້ຟັງຖ້ອຍຄຳເຫລົ່ານີ້ແລ້ວພະອົງກໍໄດ້ຊົງທຸກໃຈຍິ່ງຫນັກ, ແລະຊົງຕັ້ງໃຈຫາທາງຊ່ວຍກູ້ ດານີເອນ
ໃຫ້ລອດຈາກກົດຫມາຍນີ້. ພະອົງໄດ້ຊົງພະຍາຍາມຫາທາງຊ່ວຍ ດານີເອນ ຈົນເຖິງເວລາຕາເວັນຕົກ
[15]ແລ້ວຄົນເຫລົ່ານັ້ນທີ່ໄດ້ວາງແຜນຮ່ວມກັນກໍພາກັນມາເຂົ້າເຝົ້າກະສັດແລະບອກວ່າ, "ຂ້າແດ່, ກະສັດ,
ຂໍພະອົງຊົງຮູ້ວ່າບໍ່ມີກົດຫມາຍຂອງຄົນເມເດຍແລະຄົນເປີເຊຍທີ່ປະກາດຫ້າມຫລືກົດຫມາຍຊຶ່ງກະສັດໄດ້ຊົງປະທັບຕາແລ້ວຈະສາມາດປ່ຽງແປງໄດ້,"
[16]ແລ້ວກະສັດໄດ້ຊົງບັນຊາແລະພວກເຂົາກໍໄດ້ນຳດານີເອນເຂົ້າມາ, ແລະພວກເຂົາກໍໂຍນເຂົາເຂົ້າໄປໃນຖ້ຳສິງໂຕ.
ກະສັດໄດ້ກ່າວແກ່ດານີເອນວ່າ, "ຂໍພຣະເຈົ້າ, ຂອງເຈົ້າຜູ້ທີ່ເຈົ້າຮັບໃຊ້ຢູ່ຕະຫລອດມານັ້ນຊົງຊ່ວຍ, ກູ້ເຈົ້າເຖີດ"
[17]ແລ້ວຫີນກ້ອນຫນຶ່ງຖືກນຳມາປິດທາງເຂົ້າຖ້ຳ, ແລະກະສັດກໍໄດ້ຊົງປະທັບກາຂອງພະອົງ ແລະດ້ວຍກາຂອງແຫວນບັນດາເຊື້ອພະອົງ
ເພື່ອວ່າຈະບໍ່ມີໃຜມາປ່ຽນແປງ ສະຖານະການຂອງດານີເອນໄດ້.[18]ແລ້ວກະສັດກໍໄດ້ກັບຣາຊວັງຂອງພະອົງ
ແລະໄດ້ຊົງອົດອາຫານຕະຫລອດຄືນນັ້ນ. ບໍ່ໃຫ້ນຳສິ່ງບັນເທິງມາຖວາຍພະອົງດ້ວຍ, ແລະພະອົງຊົງນອນບໍ່ລັບ.
[19]ແລ້ວໃນຕອນເຊົ້າໆ ກະສັດກໍໄດ້ຕື່ນນອນແລະພຣະອົງໄດ້ຮີບໄປຍັງຖ້ຳສິງໂຕ.[20]ເມື່ອພະອົງມາໃກ້ຖ້ຳ, ພະອົງກໍໄດ້ກ່າວຮ້ອງດານີເອນ
ດ້ວຍສຽງທຸກໃຈຕໍ່ ດານີເອນວ່າ, "ໂອ ດານີເອນ, ຜູ້ຮັບໃຊ້ຂອງພຣະເຈົ້າ, ຜູ້ຊົງມີຊີວິດຢູ່ພຣະເຈົ້າ, ຂອງເຈົ້າຊຶ່ງເຈົ້າໄດ້ຮັບໃຊ້ເນື່ອງນິດນັ້ນ,
ຊົງສາມາດຊ່ວຍກູ້ເຈົ້າຈາກສິງໂຕໄດ້ແລ້ວບໍ?"
[21]ແລ້ວດານີເອນໄດ້ບອກກະສັດວ່າ, "ຂ້າແຕ່ກະສັດ ຂໍຊົງພະຈະເລີນເປັນນິດ!
[22]ພຣະເຈົ້າຂອງຂ້ານ້ອຍຊົງໃຊ້ທູດຂອງພຣະອົງມາປິດປາກເຫລົ່າສິງໂຕໄວ້, ແລະພວກມັນບໍ່ໄດ້ເຮັດອັນຕະລາຍແກ່ຂ້ານ້ອຍ
ເພາະຂ້ານ້ອຍບໍ່ມີຄວາມຜິດຕໍ່ຫນ້າພະອົງ, ຂ້າແດ່ກະສັດ, ແລະຂ້ານ້ອຍບໍ່ໄດ້ເຮັດຜິດປະການໃດຕໍ່ຫນ້າພຣະອົງດ້ວຍ."
[23]ແລ້ວກະສັດກໍໄດ້ມີຄວາມຊື່ນຊົມຍິນດີທີ່ສຸດ. ພຣະອົງໄດ້ຊົງບັນຊາໃຫ້ນຳດານີເອນອອກມາຈາກຖ້ຳ. ດັ່ງນັ້ນ ດານີເອນ
ກໍໄດ້ຖືກດຶງຂຶ້ນມາຈາກຖ້ຳ. ບໍ່ປາກົດວ່າມີອັນຕະລາຍຢ່າງໃດທີ່ຕົວເຂົາເລີຍ. ເພາະເຂົາໄດ້ວາງໃຈໃນພຣະເຈົ້າຂອງເຂົາ.
[24]ກະສັດໄດ້ຊົງບັນຊາ ແລະພວກເຂົາໄດ້ນຳຄົນເຫລົ່ານັ້ນທີ່ໃສ່ຮ້າຍດານີເອນ ແລະໄດ້ໂຍນຖິ້ມໃນຖ້ຳສິງໂຕ ທັງຕົວເຂົາ ແລະລູກທັງຫລາຍ
ແລະເມຍຂອງພວກເຂົາດ້ວຍ ຍັງບໍ່ທັນຕົກໄປເຖິງພື້ນຖ້ຳ ພວກສິງໂຕກໍຂະຍ້ຳພວກເຂົາ
ແລະຫັກກະດູກຂອງເຂົາທັງຫລາຍຈົນແຫລກເປັນຕ່ອນໆ.[25]ແລ້ວກະສັດດາຣິອຸດໄດ້ຊົງມີພະຣາຊສານໄປເຖິງຊົນທຸກຊາດ, ແລະທຸກພາສາ,
ທີ່ອາໃສຢູ່ໃນແຜ່ນດິນທັງຫມົດວ່າ: "ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍຢ່າງທະວີຄູນ.
[26]ເຮົາອອກຄຳສັ່ງ ໃຫ້ຄົນທັງຫລາຍໃນຣາຊອານາຈັກທັງຫມົດຂອງເຮົາຢ້ານແລະຢຳເກງພຣະເຈົ້າຂອງດານີເອນ,
ເພາະພຣະອົງຊົງເປັນພຣະເຈົ້າຜູ້ຊົງມີຊີວິດຢູ່ ຊົງດຳລົງຢູ່ເປັນນິດ, ແລະຣາຊອານາຈັກຂອງພຣະອົງຈະບໍ່ຖືກທຳລາຍ
ແລະການປົກຄອງຂອງພຣະອົງຈະດຳລົງຈົນເຖິງທີ່ສຸດ.[27]ພຣະອົງໄດ້ຊົງຊ່ວຍກູ້ແລະໄດ້ຊ່ວຍໃຫ້ພົ້ນໄພ
ພຣະອົງຊົງເຮັດຫມາຍສຳຄັນແລະການອັດສະຈັນໃນຟ້າແລະເທິງພື້ນແຜ່ນດິນ;
ພຣະອົງໄດ້ຊົງຊ່ວຍດານີເອນໃຫ້ລອດຈາກອຳນາດຂອງເຫລົ່າສິງໂຕ."


generated on Tue Jun 17 19:01:42 2025

[28]ດັ່ງນັ້ນ ດານີເອນຈຶ່ງໄດ້ຈະເລີນກ້າວໜ້າໃນຣັດສະໄໝຂອງດາຣິອຸດ ແລະໃນຣັດສະໄໝຂອງໄຊຣັດຊາວເປີເຊຍ.

 generated on Tue Jun 17 19:01:42 2025

# 7

1ໃນປີທີຫນຶ່ງແຫ່ງຣາຊການຂອງເຈົ້າເບັນຊັດຊາເຣ ກະສັດຂອງບາບີໂລນ,
ດານີເອນໄດ້ມີຄວາມຝັນແລະນິມິດໃນຄວາມຄິດຂອງເຂົາຂະນະທີ່ເຂົານອນເທິງທີ່ນອນຂອງເຂົາ
ແລ້ວເຂົາຈຶ່ງໄດ້ບັນທຶກສິ່ງທີ່ເຂົາໄດ້ເຫັນໃນຄວາມຝັນນັ້ນໄວ້ ເຂົາໄດ້ບັນທຶກເຫດການສຳຄັນທີ່ສຸດນັ້ນໄວ້2ດານີເອນໄດ້ອະທິບາຍວ່າ,
“ໃນນິມິດຂອງຂ້າພະເຈົ້າເວລາກາງຄືນຂ້າພະເຈົ້າໄດ້ເຫັນລົມທັງສີ່ຂອງຟ້າໄດ້ປຸກປັ່ນທະເລໃຫຍ່.3ສັດໃຫຍ່ສີ່ໂຕ
ແຕ່ລະໂຕກໍມີລັກຊະນະແຕກຕ່າງຈາກໂຕອື່ນໄດ້ຂຶ້ນອອກມາຈາກທະເລ

4ໂຕທີຫນຶ່ງເຫມືອນສິງໂຕແຕ່ໄດ້ມີປີກນົກອິນຊີ ເມື່ອຂ້າພະເຈົ້າເບິ່ງຢູ່ນັ້ນ ປີກທັງສອງຂ້າງຂອງມັນກໍຖືກຍົກຂຶ້ນຈາກພື້ນດິນ
ແລະຖືກເຮັດໃຫ້ຍືນສອງຕີນເຫມືອນມະນຸດ ໃຈຂອງມະນຸດຖືກມອບໃຫ້ມັນ.5ແລ້ວມີສັດໂຕທີສອງເຫມືອນຫມີ
ແລະມັນໄດ້ຍ້າຍໂຕຂ້າງຫນຶ່ງຂຶ້ນ ມັນມີກະດູກຊີ່ກໂຄງສາມຊີ່ກລະຫວ່າງແຂ້ວໃນປາກຂອງມັນ ມີສຽງບອກມັນວ່າ ‘ຈົ່ງລຸກຂຶ້ນ
ແລະກິນປະຊາຊົນຫລວງຫລາຍຢ່າງຕະກະ.’
6ຫລັງຈາກນັ້ນຂ້າພະເຈົ້າ, ໄດ້ເບິ່ງອີກຄັ້ງມີສັດອີກໂຕຫນຶ່ງ ທີ່ເບິ່ງເຫມືອນເສືອດາວ ເທິງຫລັງຂອງມັນມີປີກສີ່ປີກເຫມືອນປີກນົກ ມັນມີຫົວສີ່ຫົວ
ແລະມັນໄດ້ຮັບສິດທິອຳນາດໃນການປົກຄອງ.7ຕໍ່ຈາກນັ້ນຂ້າພະເຈົ້າໄດ້ເຫັນນິມິດໃນເວລາກາງຄືນສັດໂຕທີສີ່, ມັນຮ້າຍກາດ, ຫນ້າຢ້ານ,
ແລະແຂງແຮງຫລາຍ ມັນມີແຂ້ວເຫລັກທີ່ໃຫຍ່ ມັນກິນຢ່າງຕະກະຕະກາມ ໄດ້ຫັກເປັນຕ່ອນໆ ແລະຢຽບສິ່ງທີ່ເຫລືອກິນນັ້ນໃຫ້ຢູ່ໃຕ້ຕີນ
ມັນຕ່າງກັບສັດອື່ນທັງຫມົດ, ແລະມັນມີເຂົາສິບເຂົາ.
8ຂະນະທີ່ຂ້າພະເຈົ້າຈ້ອງເບິ່ງເຂົາເຫລົ່ານັ້ນ, ຂ້າພະເຈົ້າໄດ້ເບິ່ງແລະໄດ້ເຫັນ ມີເຂົານ້ອຍໆອີກເຂົາຫນຶ່ງງອກຂຶ້ນມາທ່າມກາງເຂົາເຫລົ່ານັ້ນ
ແລະເຂົາສາມເຂົາໄດ້ຖືກຖອນຮາກອອກໄປ ຂ້າພະເຈົ້າໄດ້ເຫັນເຂົານີ້ມີຕາເຫມືອນຕາມະນຸດ ແລະມີປາກເວົ້າໂອ້ອວດແຕ່ເລື່ອງຍິ່ງໃຫຍ່.
9ເມື່ອຂະນະທີ່ຂ້າພະເຈົ້າໄດ້ເບິ່ງ ມີຫລາຍບັນລັງມາຕັ້ງໄວ້, ອົງພຣະຜູ້ເປັນເຈົ້າໄດ້ຢູ່ເທິງບັນລັງ ເຄື່ອງນຸ່ງຂອງ. ພຣະອົງກໍຂາວຢ່າງຫິມະ
ຜົມຂອງພຣະອົງກໍເຫມືອນຂົນແກະທີ່ບໍຣິສຸດພຣະບັນລັງ. ຂອງພຣະອົງເປັນເປວໄຟ, ແລະພວກລໍ້ນັ້ນເປັນໄຟລຸກຢູ່.
10ແມ່ນ້ຳແຫ່ງໄຟກໍໄຫລພົ່ງອອກມາຕໍ່ຫນ້າພຣະອົງ; ຄົນນັບລ້ານໄດ້ບົວລະບັດພຣະອົງ, ແລະຄົນນັບຮ້ອຍລ້ານໄດ້ເຂົ້າເຝົ້າພຣະອົງ.
ສານກໍໄດ້ເລີ່ມກະບວນການ, ແລະບັນດາຫນັງສືກໍເປີດອອກ
11ຂ້າພະເຈົ້າກໍຍັງຄົງເບິ່ງຕໍ່ໄປ ເພາະຖ້ອຍຄຳໂອ້ອວດທີ່ເວົ້າອອກມາຈາກເຂົານັ້ນຂ້າພະເຈົ້າໄດ້ຈ້ອງເບິ່ງ ຂະນະທີ່ສັດໂຕນັ້ນກໍຖືກຂ້າ
ແລະຮ່າງຂອງມັນກໍຖືກທຳລາຍໄປແລະໄດ້ຖືກມອບໃຫ້ເຜົາດ້ວຍໄຟ.12ສ່ວນເລື່ອງສັດສີ່ໂຕທີ່ເຫລືອຢູ່ນັ້ນ,
ອຳນາດປົກຄອງຂອງພວກມັນກໍຖືກຖອນໄປ, ແຕ່ຊີວິດຂອງພວກມັນໄດ້ຖືກຍືດຕໍ່ໄປໃນຊ່ວງເວລາຫນຶ່ງ.
13ໃນນິມິດຂອງຂ້າພະເຈົ້າໃນຄືນນັ້ນຂ້າພະເຈົ້າໄດ້ເຫັນຄົນຫນຶ່ງກຳລັງມາພ້ອມກັບບັນດາເມກຂອງຟ້າເຫມືອນບຸດມະນຸດພຣະອົງມາພ້ອມກັບອົງພຣະຜູ້ເປັນເຈົ້າແລ
14ພຣະຣາຊອຳນາດໃນການຄອບຄອງແລະສັກສີ ກັບຣິດອຳນາດຣາຊວົງໄດ້ຊົງມອບໄວ້ກັບພຣະອົງ ເພື່ອປະຊາຊົນ, ທຸກຊາດ, ແລະທຸກພາສາ,
ຈະຮັບໃຊ້ທ່ານອຳນາດສິດຂາດໃນການຄອບຄອງຈະບໍ່ສິ້ນສຸດໄປ ແລະອານາຈັກຂອງພຣະອົງເປັນອານາຈັກຊຶ່ງຈະບໍ່ຖືກທຳລາຍເລີຍ
15ສ່ວນຂ້າພະເຈົ້າ ດານີເອນ ຈິດໃຈຂອງຂ້າພະເຈົ້າເປັນທຸກຢູ່ພາຍໃນ ແລະນິມິດທີ່ຂ້າພະເຈົ້າໄດ້ເຫັນ
ໃນຂອງຂ້າພະເຈົ້າເຮັດໃຫ້ຂ້າພະເຈົ້າບໍ່ສະບາຍໃຈ.16ຂ້າພະເຈົ້າໄດ້ເຂົ້າໄປໃກ້ຜູ້ຫນຶ່ງໃນພວກເຂົາທີ່ຢືນຢູ່ທີ່ນັ້ນ
ແລະໄດ້ຂໍໃຫ້ເຂົາສະແດງຕໍ່ຂ້າພະເຈົ້າເຖິງຄວາມຫມາຍຂອງເລື່ອງລາວນີ້.
17ສັດໃຫຍ່ທັງສີ່ຄືກະສັດ, ສີ່ພະອົງຊຶ່ງເກີດມາຈາກແຜ່ນດິນໂລກ,18ແຕ່ບັນດາຜູ້ບໍຣິສຸດຂອງອົງຜູ້ສູງສຸດຈະຮັກຣາຊອານາຈັກ
ແລະພວກເຂົາຖືກຳມະສິດຣາຊອານາຈັກນັ້ນສືບໄປເປັນນິດນິລັນດອນ.
19ແລ້ວຂ້າພະເຈົ້າກໍຢາກຮູ້ຄວາມຈິງກ່ຽວກັບສັດໂຕທີສີ່ນັ້ນ ຊຶ່ງມັນຜິດແປກຈາກສັດອື່ນທັງຫມົດ ແລະຮ້າຍກາດເຫລືອເກີນ
ດ້ວຍແຂ້ວເຫລັກແລະເລັບຕີນທອງສຳຣິດ ຊຶ່ງມັນໄດ້ກິນແລະໄດ້ຈີກອອກເປັນຕ່ອນໆ ແລະໄດ້ຢຽບສິ່ງທີ່ເຫລືອນັ້ນດ້ວຍຕີນຂອງມັນ.
20ຂ້າພຣະເຈົ້າຕ້ອງການທີ່ຈະຮູ້ກ່ຽວກັບເຂົາສິບເຂົາເທິງຫົວຂອງມັນແລະເຂົາອີກເຂົາຫນຶ່ງຊຶ່ງງອກຂຶ້ນມາຕໍ່ຫນ້າເຂົາສາມເຂົາທີ່ຫລຸດໄປ
ຂ້າພະເຈົ້າຕ້ອງການຮູ້ເລື່ອງເຂົາຊຶ່ງມີຕາແລະມີປາກທີ່ເວົ້າໂອ້ອວດເລື່ອງໃຫຍ່ກວ່າເຫລົ່າເພື່ອນຂອງມັນ.
21ເມື່ອຂ້າພະເຈົ້າໄດ້ເບິ່ງ ເຂົານີ້ເຮັດສົງຄາມກັບບັນດາຜູ້ບໍຣິສຸດແລະໄດ້ມີໄຊຊະນະເຫນືອພວກເຂົາ.
22ຈົນກວ່າອົງພຣະຜູ້ເປັນເຈົ້າໄດ້ສະເດັດມາເຖິງ ແລະຄວາມຍຸດຕິທຳໄດ້ຖືກມອບໃຫ້ແກ່ບັນດາຜູ້ບໍຣິສຸດຂອງອົງຜູ້ສູງສຸດ
ແລ້ວເວລາກຳນົດໄດ້ມາເຖິງທີ່ບັນດາຜູ້ບໍຣິສຸດຈະຮັບຣາຊອານາຈັກ.
23ນີ້ຄືສິ່ງທີ່ບຸກຄົນນັ້ນໄດ້ກ່າວວ່າ ‘ເລື່ອງສັດໂຕທີສີ່ນັ້ນ ຈະມີຣາຊອານາຈັກທີສີ່ເທິງແຜ່ນດິນຊຶ່ງຈະແຕກຕ່າງຈາກຣາຊອານາຈັກອື່ນໆ
ມັນຈະກິນທັງແຜ່ນດິນນີ້ ແລະຢຽບແຜ່ນດິນລົງ ແລະເຮັດໃຫ້ເປັນຕ່ອນໆ.24ສ່ວນເລື່ອງເຂົາສິບເຂົານັ້ນ,
ຈາກຣາຊອານາຈັກນີ້ຈະມີກະສັດສິບພຣະອົງເກີດຂຶ້ນ, ແລະມີກະສັດອີກອົງຫນຶ່ງເກີດຂຶ້ນພາຍຫລັງພວກເຂົາ.
ເຂົາຈະແຕກຕ່າງຈາກຄົນທີ່ມີມາກ່ອນຫນ້າ, ແລະເຂົາຈະລົ້ມກະສັດສາມພະອົງ.
25ເຂົາຈະເວົ້າຄຳກ່າວຮ້າຍອົງຜູ້ສູງສຸດແລະຈະຂົ່ມເຫັງບັນດາປະຊາຊົນຜູ້ບໍຣິສຸດຂອງອົງຜູ້ສູງສຸດນັ້ນ ເຂົາຈະພະຍາຍາມປ່ຽນແປງກົດຫມາຍ
ແລະວັນສະຫລອງຕ່າງໆສາສະຫນາ ສິ່ງເຫລົ່ານີ້ຈະຖືກມອບໄວ້ໃນມືຂອງທ່ານ, ຫນຶ່ງປີ, ສອງປີ,
ກັບເຄິ່ງປີ26ແຕ່ການພິຈາຣະນາຄະດີກໍຈະດຳເນີນຕໍ່ໄປ ແລະພວກເຂົາຈະນຳເອົາຣິດອຳນາດຂອງເຂົາໄປ
ເພື່ອຈະຊົງເຜົາຜານແລະທຳລາຍເສຍໃຫ້ສິ້ນສຸດ.
27ຣາຊອານາຈັກກັບອຳນາດ ແລະຄວາມຍິ່ງໃຫຍ່ແຫ່ງບັນດາຣາຊອານາຈັກພາຍໃຕ້ຟ້າທັງຫມົດ
ຈະຕ້ອງຖືກມອບໄວ້ແກ່ບັນດາປະຊາຊົນຜູ້ບໍຣິສຸດຂອງອົງຜູ້ສູງສຸດນັ້ນ ແຜ່ນດິນຂອງທ່ານເຫລົ່ານີ້ຈະເປັນແຜ່ນດິນນິລັນ ແລະຣາຊອານາຈັກ,
ທັງຫມົດຈະຮັບໃຊ້ແລະເຊື່ອຟັງທ່ານ.’28ນີ້ເປັນການສິ້ນສຸດຂອງເລື່ອງນີ້ ສ່ວນຂ້າພະເຈົ້າ, ດານີເອນ,
ຄວາມຄິດຂອງຂ້າພະເຈົ້າກໍເຮັດໃຫ້ຂ້າພະເຈົ້າຕົກໃຈຫລາຍ ແລະຫນ້າຂອງຂ້າພະເຈົ້າກໍຊີດໄປ ແຕ່ຂ້າພະເຈົ້າກໍເກັບເລື່ອງລາວນີ້ໄວ້ໃນໃຈ”

8 [1]ໃນປີທີສາມແຫ່ງຣາຊການກະສັດເບັນຊັດຊາເຣ, ຂ້າພະເຈົ້າ, ດານີເອນ, ໄດ້ເຫັນນິມິດປາກົດແກ່ຂ້າພະເຈົ້າ
(ຫລັງຈາກນິມິດທີ່ໄດ້ປາກົດແກ່ຂ້າພະເຈົ້າຄັ້ງທຳອິດນັ້ນ).[2]ຂ້າພະເຈົ້າໄດ້ເຫັນໃນນິມິດ, ຂະນະທີ່ຂ້າພະເຈົ້າໄດ້ກຳລັງເບິ່ງເຫັນ ປາກົດວ່າ
ຂ້າພະເຈົ້າໄດ້ຢູ່ທີ່ປ້ອມຂອງເມືອງຊູຊາ ຊຶ່ງຢູ່ໃນແຂວງເອລາມ. ຂ້າພະເຈົ້າກໍໄດ້ເຫັນນິມິດ ທີ່ຂ້າພະເຈົ້າໄດ້ຢູ່ທີ່ແມ່ນ້ຳອູລາຍ.

[3]ຂ້າພະເຈົ້າໄດ້ເງີຍຫນ້າເບິ່ງ ແລະໄດ້ເຫັນແກະໂຕຜູ້ໂຕຫນຶ່ງມີເຂົາສອງເຂົາ, ກຳລັງຢືນຢູ່ທີ່ຂ້າງແມ່ນ້ຳເຂົາຂ້າງຫນຶ່ງກໍຍາວກວ່າອີກຂ້າງຫນຶ່ງ.
ແຕ່ເຂົາທີ່ຍາວນັ້ນປົ່ງມາຊ້າກວ່າເຂົາທີ່ສັ້ນກວ່າແລະໄດ້ປົ່ງອອກມາເລື້ອຍໆ ແລ້ວກໍເປັນເຂົາທີ່ຍາວ.
[4]ຂ້າພະເຈົ້າໄດ້ເຫັນແກະຜູ້ໂຕນັ້ນຊິດເຂົາໄປທາງຕາເວັນຕົກ ແລ້ວກໍທາງເຫນືອ, ແລະຕໍ່ມາກໍທາງໃຕ້; ບໍ່ມີສັດໂຕໃດສູ້ມັນໄດ້
ບໍ່ມີໂຕໃດໃນພວກມັນຊ່ວຍໃຫ້ພົ້ນຈາກອຳນາດຂອງມັນໄດ້. ມັນເຮັດຕາມໃຈຊອບແລະມັນກໍໄດ້ກາຍເປັນຜູ້ຍິ່ງໃຫຍ່.
[5]ເມື່ອຂ້າພະເຈົ້າກຳລັງຄິດເຖິງກ່ຽວກັບເລື່ອງນີ້ຢູ່, ຂ້າພະເຈົ້າໄດ້ເຫັນແບ້ຜູ້ໂຕຫນຶ່ງມາຈາກທິດຕາເວັນຕົກ
ມັນໄດ້ໂດດຂ້າມຫນ້າພື້ນແຜ່ນດິນທັງຫມົດໄປ
ແລ່ນຢ່າງໄວຫລາຍຈົນເບິ່ງເຫມືອນວ່າບໍ່ແຕະຕ້ອງພື້ນດິນເລີຍແລະແບ້ໂຕນັ້ນໄດ້ມີເຂົາໃຫຍ່ຢູ່ໃນລະຫວ່າງຕາຂອງມັນເຂົາຫນຶ່ງ.
[6]ມັນໄດ້ເຫັນແກະໂຕຜູ້ທີ່ຢືນຢູ່ທີ່ຝັ່ງແມ່ນ້ຳ ແລະແບ້ໄດ້ແລ່ນເຂົ້າໃສ່ແກະຜູ້ໂຕນັ້ນດ້ວຍຄວາມໂກດຮ້າຍ.
[7]ຂ້າພະເຈົ້າໄດ້ເຫັນແບ້ໂຕຜູ້ເຂົ້າມາໃກ້ແກະໂຕຜູ້ ມັນໂກດຮ້າຍແກະໂຕຜູ້ຫລາຍ
ແລະມັນໄດ້ຊົນແກະໂຕຜູ້ແລະເຮັດໃຫ້ເຂົາທັງສອງຂອງມັນຫັກໄປ ແກະໂຕຜູ້ກໍບໍ່ມີກຳລັງທີ່ຈະຢືນຕໍ່ຫນ້າມັນໄດ້
ແບ້ໄດ້ໂຍນແກະໂຕຜູ້ລົງທີ່ພື້ນດິນແລະໄດ້ຢຽບມັນ ບໍ່ມີໃຜສາມາດຊ່ວຍແກະໂຕຜູ້ໃຫ້ພົ້ນອຳນາດຂອງມັນໄດ້.
[8]ແລ້ວແບ້ໂຕຜູ້ກໍໃຫຍ່ໂຕຂຶ້ນຢ່າງຫລາຍ, ແຕ່ເມື່ອມັນໄດ້ແຂງແກ່ງຂຶ້ນເຂົາໃຫຍ່ຂອງມັນກໍຫັກ,
ແລະໃນທີ່ນັ້ນກໍມີເຂົາອີກສີ່ເຂົາປົ່ງຂຶ້ນແທນທີ່ບ່ອນນັ້ນ ຫັນໄປທາງທິດລົມທັງສີ່ຂອງຟ້າທັງຫລາຍ.
[9]ແລະຈາກເຂົາຫນຶ່ງໃນບັນດາເຂົາເຫລົ່ານີ້ມີເຂົານ້ອຍໆ ອີກເຂົາຫນຶ່ງໄດ້ປົ່ງອອກມາທຳອິດກໍເປັນເຂົານ້ອຍໆ
ແຕ່ໄດ້ກາຍເປັນເຂົາໃຫຍ່ຂະຫຍາຍໄປທາງໃຕ້, ໄປທາງຕາເວັນອອກ, ແລະໄປຍັງແຜ່ນດິນອັນສວຍງາມ.
[10]ມັນໄດ້ໃຫຍ່ຫລາຍຈົນເຂົ້າສູ້ຮົບໃນສົງຄາມກັບກອງທັບແຫ່ງຟ້າ. ບາງຄົນໃນກອງທັບນັ້ນແລະດາວບາງດວງຖືກໂຍນລົງມາຍັງພື້ນດິນ
ແລ້ວມັນໄດ້ຢຽບຢ່ຳເສຍ.
[11]ມັນໄດ້ເຮັດໂຕຂອງມັນເອງໃຫຍ່ຂຶ້ນອີກຈົນເຫມືອນຜູ້ບັນຊາການກອງທັບ ແລະເຄື່ອງເຜົາບູຊາເນືອງນິດກໍຖືກຊິງໄປຈາກເຂົາ, ແລະ
ບ່ອນນະມັດສະການຂອງເຂົາກໍຖືກເຮັດໃຫ້ສູນເສຍ.[12]ເນື່ອງຈາກການກະບົດ ກອງທັບຈະຖືກມອບໃຫ້ແກ່ເຂົາຂອງແບ້ໂຕຜູ້,
ແລະເຄື່ອງເຜົາບູຊາຈະຖືກຢຸດຢັ້ງ ເຂົານັ້ນຈະໂຍນຄວາມຈິງລົງພື້ນດິນ, ແລະເຂົານັ້ນກໍໄດ້ຮັບຜົນສຳເລັດໃນສິ່ງທີ່ມັນເຮັດ.
[13]ແລ້ວຂ້າພະເຈົ້າໄດ້ຍິນຜູ້ບໍຣິສຸດທ່ານຫນຶ່ງກຳລັງເວົ້າຢູ່ ແລະຜູ້ບໍຣິສຸດອີກທ່ານຫນຶ່ງໄດ້ມາຕອບເຂົາວ່າ, “ສິ່ງນີ້ຈະຢູ່ອີກດົນເທົ່າໃດ
ນິມິດນີ້ທີ່ກ່ຽວກັບເຄື່ອງເຜົາບູຊາຄວາມບາບທີ່ນຳໄປສູ່ການພິນາດ, ແລະເລື່ອງການຍົກບ່ອນນະມັດສະການໃຫ້ໄປ,
ແລະກອງທັບຂອງຟ້າທີ່ຖືກຢຽບຢ່ຳລົງ?”[14]ເຂົາໄດ້ຕອບຂ້າພະເຈົ້າວ່າ, “ມັນຈະຢູ່ດົນ 2,300 ເວລາແລງແລະເວລາເຊົ້າ
ຫລັງຈາກບ່ອນນະມັດສະການນັ້ນຈະກັບສູ່ສະພາບອັນຄວນ.”
[15]ເມື່ອຂ້າພະເຈົ້າ, ດານີເອນ, ໄດ້ເຫັນນິມິດແລ້ວ, ຂ້າພະເຈົ້າກໍພະຍາຍາມເຂົ້າໃຈສິ່ງເຫລົ່ານັ້ນ.
ແລ້ວມີຜູ້ຫນຶ່ງທີ່ເບິ່ງແລ້ວເຫມືອນມະນຸດທີ່ຢືນຢູ່ຫນ້າຂ້າພະເຈົ້າ.[16]ຂ້າພະເຈົ້າໄດ້ຍິນສຽງຊາຍຄົນຫນຶ່ງ ກຳລັງເອີ້ນລະຫວ່າງແມ່ນ້ຳອູລາຍ.
ເຂົາໄດ້ເວົ້າວ່າ," ຄັບຣີເອນ, ຈົ່ງເຮັດໃຫ້ຊາຍຄົນນີ້ເຂົ້າໃຈນິມິດນັ້ນເຖີດ."[17]ດັ່ງນັ້ນເຂົາຈຶ່ງໄດ້ມາໃກ້ທີ່ຂ້າພະເຈົ້າ. ຢືນຢູ່ແລະເມື່ອເຂົາໄດ້ມາ,
ຂ້າພະເຈົ້າກໍຕົກໃຈຫມູບຫນ້າລົງເທິງພື້ນດິນ. ເຂົາໄດ້ກ່າວກັບຂ້າພະເຈົ້າວ່າ,"ມະນຸດເອີຍ, ຈົ່ງເຂົ້າໃຈເຖີດວ່າ,
ນິມິດນັ້ນເປັນເລື່ອງຂອງການສິ້ນສຸດ."
[18]ເມື່ອເຂົາໄດ້ເວົ້າຢູ່ກັບຂ້າພະເຈົ້າ, ຂ້າພະເຈົ້າກໍໄດ້ສະຫລົບໄປແລະດ້ວຍຫມູບຫນ້າຕິດດິນ.
ແລ້ວເຂົາໄດ້ແຕະຕ້ອງຂ້າພະເຈົ້າແລະເຮັດໃຫ້ຂ້າພະເຈົ້າຢືນຂຶ້ນ.[19]ເຂົາໄດ້ກ່າວວ່າ,"ນີ້ແຫລະ,
ເຮົາຈະເຮັດໃຫ້ເຈົ້າຮູ້ເຖິງສິ່ງຊຶ່ງຈະເກີດຂຶ້ນພາຍຫລັງໃນຊ່ວງເວລາແຫ່ງຄວາມໂກດຮ້າຍ,
ເພາະນິມິດນັ້ນກ່ຽວກັບວາລະກຳນົດແຫ່ງການສິ້ນສຸດ.
[20]ເລື່ອງແກະໂຕຜູ້ທີ່ເຈົ້າເຫັນ, ໂຕທີ່ມີສອງເຂົາ ພວກເຂົາເປັນກະສັດຂອງຄົນມີເດຍແລະຄົນເປີເຊຍ.[21]ແບ້ໂຕຜູ້ຄື ກະສັດຂອງກຣີດ.
ແລະເຂົາໃຫຍ່ຢູ່ລະຫວ່າງຕາຂອງເຂົາຄືກະສັດອົງທຳອິດ.
[22]ມີເຂົາອີກ ສີ່ເຂົາປົ່ງຂຶ້ນມາແທນໃນບ່ອນນັ້ນຄື ອານາຈັກສີ່ອານາຈັກ ຈະເກີດຂຶ້ນຈາກຊາດຂອງເຂົາ,
ແຕ່ຈະບໍ່ໄດ້ດ້ວຍອຳນາດຍິ່ງໃຫຍ່ຂອງເຂົາ.[23]ບັ້ນປາຍຂອງອານາຈັກເຂົາທັງຫລາຍນັ້ນ, ເມື່ອຜູ້ລະເມີດໄດ້ເຮັດຄວາມຊົ່ວເຕັມຂະຫນາດແລ້ວ,
ຈະມີກະສັດ, ຫນ້າຕາໂຫດຮ້າຍອົງຫນຶ່ງເກີດມາ, ເພິ່ນສະຫລາດຫລາຍ.
[24]ອຳນາດຂອງພະອົງຈະໃຫຍ່ໂຕຫລາຍ ແຕ່ບໍ່ແມ່ນອຳນາດຂອງພະອົງເອງ. ພະອົງຈະຊົງເຮັດໃຫ້ເກີດຄວາມພິນາດຢ່າງຫນ້າປະຫລາດໃຈ;
ພະອົງຈະຊົງກະທຳການແລະປະສົບຄວາມສຳເລັດ. ພະອົງຈະຊົງທຳລາຍຊົນຊາດທີ່ມີກຳລັງຫລາຍ, ຄືປະຊາຊົນຂອງບັນດາຜູ້ບໍຣິສຸດ.
[25]ດ້ວຍຄວາມສະຫລາດຂອງພະອົງ ຈະເຮັດໃຫ້ການລໍ້ລວງແຜ່ຂະຫຍາຍຂຶ້ນດ້ວຍນ້ຳມືຂອງພະອົງ. ພະອົງຈະຄິດວ່າຕົວພະອົງເອງນັ້ນຍິ່ງໃຫຍ່
ພະອົງຈະຊົງທຳລາຍຄົນຫລວງຫລາຍເກີນກວ່າທີ່ຈະຄາດຄິດໄດ້, ພະອົງຈະຊົງລຸກຂຶ້ນຕໍ່ສູ້ຈອມກະສັດຜູ້ຍິ່ງໃຫຍ່,
ແລະພະອົງຈະຕ້ອງຖືກທຳລາຍດ້ວຍອຳນາດທີ່ບໍ່ໄດ້ມາຈາກມືມະນຸດ.
[26]ນິມິດເລື່ອງເວລາແລງແລະເວລາເຊົ້າ ຊຶ່ງໄດ້ເຄີຍບອກເລົ່ານັ້ນເປັນຄວາມຈິງ. ແຕ່ຈົ່ງຮັກສານິມິດນັ້ນໄວ້,
ເພາະເປັນເລື່ອງຂອງອີກຫລາຍວັນຂ້າງຫນ້າ."
[27]ແລ້ວຂ້າພະເຈົ້າ, ດານີເອນ, ກໍອ່ອນເພຍແລະນອນຫມົດແຮງຢູ່ຫລາຍວັນ. ແລ້ວຂ້າພະເຈົ້າກໍໄດ້ລຸກຂຶ້ນ,
ແລະໄປປະຕິບັດຣາຊການຂອງກະສັດ. ແຕ່ຂ້າພະເຈົ້າບໍ່ສະບາຍໃຈເພາະນິມິດນັ້ນ, ແລະບໍ່ມີໃຜໄດ້ເຂົ້າໃຈເລື່ອງລາວເລີຍ.


generated on Tue Jun 17 19:01:42 2025

# 9

1ດາຣິອັດ ລູກຊາຍກະສັດອາຫາສຸເອຣັດ, ເຊື້ອສາຍຂອງຄົນເມເດຍ.
ອາຫາສຸເອຣັດນີ້ແຫລະຜູ້ທີ່ໄດ້ເປັນກະສັດເຫນືອອານາຈັກຂອງບາບີໂລນ.2ບັດນີ້ໃນປີທີຫນຶ່ງແຫ່ງຣາຊການຂອງ ດາຣິອັດ' ຂ້າພະເຈົ້າ,
ດານີເອນ, ໄດ້ກໍາລັງສຶກສາເບິ່ງໃນຫນັງສືທີ່ບັນທຶກຖ້ອຍຄໍາຂອງພຣະຢາເວ, ຖ້ອຍຄໍາທີ່ໄດ້ມາເຖິງ ເຢເຣມີຢາ ຜູ້ທໍານວຍຖ້ອຍຄໍາ.
ຂ້າພະເຈົ້າໄດ້ຮັບຮູ້ວ່າຈະເປັນເວລາ ເຈັດສິບປີຈົນເຖິງເວລາຄວາມຮົກຮ້າງວ່າງເປົ່າຂອງ ກຸງເຢຣູຊາເລັມສິ້ນສຸດແລ້ວ.

3ຂ້າພະເຈົ້າກໍໄດ້ຫັນຫນ້າໄປຫາພຣະເຈົ້າ ອົງພຣະຜູ້ເປັນເຈົ້າ, ເພື່ອສະແຫວງຫາພຣະອົງດ້ວຍການອະທິຖານແລະການວິງວອນ,
ດ້ວຍການອົດອາຫານ, ແລະນຸ່ງຫົ່ມຜ້າກະສອບແລະນັ່ງເທິງຂີ້ເຖົ່າ.4ຂ້າພະເຈົ້າໄດ້ອະທິຖານຕໍ່ພຣະຢາເວພຣະເຈົ້າຂອງຂ້າພະເຈົ້າ,
ແລະຂ້າພະເຈົ້າໄດ້ສາລະພາບຄວາມບາບຂອງພວກເຮົາວ່າ, “ຂ້າແດ່ອົງພຣະຜູ້ເປັນເຈົ້າ
ພຣະອົງຊຶ່ງເປັນພຣະເຈົ້າຜູ້ໃຫຍ່ຍິ່ງແລະຫນ້າເກງຂາມ
ຜູ້ຊຶ່ງຮັກສາຄໍາສັນຍາແລະຄວາມຮັກຫມັ້ນຄົງຕໍ່ຜູ້ທີ່ຮັກພຣະອົງແລະປະຕິບັດຕາມພຣະບັນຍັດຂອງພຣະອົງ.
5ພວກຂ້ານ້ອຍໄດ້ເຮັດບາບແລະໄດ້ເຮັດຜິດ. ພວກຂ້ານ້ອຍໄດ້ກໍການອາທໍາແລະໄດ້ເຮັດການກະບົດ,
ໄດ້ຫັນຫນີຈາກພຣະບັນຍັດແລະກົດຫມາຍຂອງພຣະອົງ.6ພວກຂ້ານ້ອຍ ບໍ່ໄດ້ຟັງບັນດາຜູ້ທໍານວຍຖ້ອຍຄໍາຜູ້ຮັບໃຊ້ຂອງພຣະອົງ
ຜູ້ໄດ້ກ່າວໃນພຣະນາມຂອງພຣະອົງຕໍ່ບັນດາກະສັດຂອງພວກຂ້ານ້ອຍ, ທັງ ຕໍ່ບັນດາຜູ້ນໍາ, ບັນພະບູລຸດຂອງພວກຂ້ານ້ອຍ,
ແລະຮວມທັງປະຊາຊົນທຸກຄົນຂອງແຜ່ນດິນ.
7ຂ້າແດ່, ອົງພຣະຜູ້ເປັນເຈົ້າ, ຄວາມຊອບທໍາເປັນຂອງພຣະອົງ. ສໍາລັບພວກຂ້ານ້ອຍໃນວັນນີ້, ມີແຕ່ຄວາມອັບອາຍ,
ຂາຍຫນ້າຂອງປະຊາຊົນຢູດາຍ ແລະຄົນເຫລົ່ານັ້ນທີ່ອາໄສຢູ່ໃນກຸງເຢຣູຊາເລັມ, ແລະຄົນອິດສະຣາເອນ.
ທັງຫມົດນີ້ລວມທັງຄົນເຫລົ່ານັ້ນຜູ້ທີ່ຢູ່ໃກ້ແລະຄົນເຫລົ່ານັ້ນທີ່ຢູ່ໄກອອກໄປ ໃນແຜ່ນດິນທັງຫລາຍຊຶ່ງພຣະອົງຊຶ່ງຂັບໄລ່ພວກເຂົາໄປນັ້ນ.
ນີ້ເປັນເພາະວ່າການຫັກຫລັງຢ່າງຮ້າຍແຮງທີ່ພວກຂ້ານ້ອຍໄດ້ກະທໍາຕໍ່ພຣະອົງ.8ຂ້າແດ່, ພຣະຢາເວ,
ສໍາລັບພວກຂ້ານ້ອຍຄວາມອັບອາຍຂາຍຫນ້າຄວນເປັນຂອງພວກຂ້ານ້ອຍ ຂອງກະສັດ, ຂອງພວກຂ້ານ້ອຍ ຂອງບັນດາຜູ້ນໍາ,
ແລະບັນພະບູລຸດຂອງພວກຂ້ານ້ອຍ ເພາະພວກຂ້ານ້ອຍໄດ້ກະທໍາບາບຕໍ່ພຣະອົງ.
9ພຣະກາຣຸນາແລະການອະໄພໂທດເປັນຂອງອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍທັງຫລາຍ, ເພາະວ່າພວກຂ້ານ້ອຍໄດ້ກະບົດຕໍ່ພຣະອົງ.
10ພວກຂ້ານ້ອຍບໍ່ໄດ້ເຊື່ອຟັງພຣະສຸລະສຽງຂອງພຣະຢາເວ ພຣະເຈົ້າຂອງພວກຂ້ານ້ອຍ ໂດຍການປະຕິບັດຕາມກົດບັນຍັດຂອງພຣະອົງ
ທີ່ໄດ້ປະທານຜ່ານບັນດາຜູ້ທໍານວຍ ຖ້ອຍຄໍາຜູ້ຮັບໃຊ້ຂອງພຣະອົງ.11ອິດສະຣາເອນທັງຫມົດ ໄດ້ເຮັດຜິດຕໍ່ກົດບັນຍັດຂອງພຣະອົງ
ແລະໄດ້ຫັນໄປ, ໄດ້ປະຕິເສດທີ່ຈະເຊື່ອຟັງພຣະສຸລະສຽງຂອງພຣະອົງ,
ຄໍາສາບແຊ່ງແລະຄໍາປະຕິຍານຊຶ່ງໄດ້ຈາລຶກໄວ້ໃນກົດບັນຍັດຂອງໂມເຊ, ຜູ້ຮັບໃຊ້ຂອງພຣະເຈົ້າ, ຈຶ່ງໄດ້ເທລົງເຫນືອພວກຂ້ານ້ອຍ,
ເພາະພວກຂ້ານ້ອຍໄດ້ເຮັດບາບຕໍ່ພຣະອົງ.
12ພຣະອົງໄດ້ຊົງຢືນຢັນຖ້ອຍຄໍາຂອງພຣະອົງ ຊຶ່ງພຣະອົງໄດ້ບອກກ່າວໂທດພວກຂ້ານ້ອຍ ແລະກ່າວໂທດຜູ້ຊຶ່ງປົກຄອງພວກຂ້ານ້ອຍ,
ໂດຍນໍາວິບັດຢ່າງໃຫຍ່ຫລວງມາເຫນືອຂ້ານ້ອຍທັງຫລາຍ. ເພາະພາຍໃຕ້ທ້ອງຟ້າທັງຫມົດ
ບໍ່ມີສິ່ງໃດເລີຍທີ່ໄດ້ເຮັດແລ້ວທີ່ສາມາດຈະປຽບທຽບກັບສິ່ງທີ່ໄດ້ເຮັດແກ່ເຢຣູຊາເລັມແລ້ວນັ້ນ.13ດັ່ງທີ່ໄດ້ຈາ ລຶກໄວ້ໃນກົດບັນຍັດຂອງໂມເຊ,
ແລ້ວວິບັດທັງສິ້ນກໍໄດ້ຕົກຢູ່ເຫນືອຂ້ານ້ອຍທັງຫລາຍແລ້ວ,
ແຕ່ພວກຂ້ານ້ອຍຍັງບໍ່ໄດ້ອ້ອນວອນຂໍພຣະກາຣຸນາຈາກພຣະຢາເວພຣະເຈົ້າຂອງຂ້ານ້ອຍທັງຫລາຍ
ດ້ວຍການຫັນຈາກຄວາມຜິດຂອງພວກຂ້ານ້ອຍ ຫລືໃສ່ໃຈໃນຄວາມຈິງຂອງພຣະອົງ.14ດັ່ງນັ້ນພຣະຢາເວໄດ້ຊົງຕຽມຄວາມວິບັດໄວ້ພ້ອມ
ແລະໄດ້ຊົງນໍາມາເຫນືອພວກຂ້ານ້ອຍ,
ເພາະພຣະຢາເວພຣະເຈົ້າຂອງພວກຂ້ານ້ອຍຊົງເປັນຜູ້ຊອບທໍາໃນພຣະຣາຊກິດທັງສິ້ນຊຶ່ງພຣະອົງໄດ້ຊົງກະທໍາ,
ແຕ່ພວກຂ້ານ້ອຍກໍຍັງບໍ່ໄດ້ເຊື່ອຟັງພຣະສຸລະສຽງຂອງພຣະອົງ.
15ບັດນີ້, ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າ, ຂອງພວກຂ້ານ້ອຍ ພຣະອົງໄດ້ຊົງນໍາປະຊາຊົນຂອງພຣະອົງອອກຈາກແຜ່ນດິນເອຢິບ
ດ້ວຍມືອັນຊົງຣິດ, ແລະພຣະອົງໄດ້ຊົງເຮັດໃຫ້ພຣະນາມຂອງພຣະອົງເລື່ອງລືມາຈົນທຸກມື້ນີ້.
ແຕ່ພວກຂ້ານ້ອຍໄດ້ເຮັດບາບແລະໄດ້ເຮັດສິ່ງຊົ່ວຮ້າຍທັງຫມົດ.16ຂ້າແດ່ອົງພຣະຜູ້ເປັນເຈົ້າ,
ເພາະຕາມການກະທໍາອັນຊອບທໍາທັງສິ້ນຂອງພຣະອົງ ຂໍໃຫ້ຄວາມໃຈຮ້າຍແລະຄວາມໂກດຮ້າຍຂອງພຣະອົງຫັນກັບຈາກກຸງເຢຣູຊາເລັມ,
ເມືອງຂອງພຣະອົງ ພູເຂົາບໍຣິສຸດຂອງພຣະອົງ. ເພາະບາບຂອງພວກຂ້ານ້ອຍ, ແລະເພາະຄວາມຜິດຂອງບັນພະບູລຸດຂອງພວກຂ້ານ້ອຍ,
ກຸງເຢຣູຊາເລັມແລະປະຊາຊົນຂອງພຣະອົງຈຶ່ງກາຍເປັນທີ່ເຍາະເຍີ້ຍໃນຊົນຊາດທັງສິ້ນທີ່ຢູ່ຮອບຂ້າງພວກຂ້ານ້ອຍ.
17ບັດນີ້, ຂ້າແດ່ພຣະເຈົ້າ, ຂອງພວກຂ້ານ້ອຍ ຂໍພຣະອົງຊົງຟັງຄໍາອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ; ແລະຄໍາທູນຂໍເພື່ອຄວາມເມດຕາ,
ພວກເຂົາ ຂ້າແດ່ອົງພຣະຜູ້ເປັນເຈົ້າ, ເພື່ອເຫັນແກ່ພຣະອົງ
ຂໍພຣະພັກຂອງພຣະອົງສ່ອງແສງເຫນືອບ່ອນນະມັດສະການຂອງພຣະອົງຊຶ່ງວ່າງເປົ່ານັ້ນ.18ຂ້າແດ່ພຣະເຈົ້າ, ຂອງຂ້ານ້ອຍຂໍຊົງງ່ຽງຫູ
ແລະຂໍຊົງຫລຽວເບິ່ງພວກຂ້ານ້ອຍ, ຖືກເຮັດໃຫ້ຮົກຮ້າງວ່າງເປົ່າ; ຂໍຊົງຫລຽວເບິ່ງເມືອງຊຶ່ງມີຊື່ຕາມພຣະນາມຂອງພຣະອົງ.
ແລະພວກຂ້ານ້ອຍ. ກໍາລັງພາວັນນາອະທິຖານຫາພຣະອົງ ບໍ່ແມ່ນຍ້ອນພວກຂ້ານ້ອຍກະທໍາໃນສິ່ງທີ່ຖືກຕ້ອງ
ແຕ່ເພາະພຣະກະຣຸນາຍິ່ງໃຫຍ່ຂອງພຣະອົງ.19ຂ້າແດ່ອົງພຣະຜູ້ເປັນເຈົ້າ, ຂໍໂຜດຟັງສຽງຂອງພວກຂ້ານ້ອຍດ້ວຍ! ຂ້າແດ່ອົງພຣະຜູ້ເປັນເຈົ້າ,
ຂໍຊົງໃຫ້ອະໄພ! ຂໍຊົງໃສ່ໃຈແລະຊົງຈັດການ! ເພື່ອເຫັນແກ່ພຣະນາມຂອງພຣະອົງ, ຂ້າແດ່ພຣະເຈົ້າ,
ຂອງຂ້ານ້ອຍຂໍຢ່າຊົງຊັກເລີຍເພາະວ່າເມືອງຂອງພຣະອົງແລະປະຊາຊົນຂອງພຣະອົງກໍມີຊື່ຕາມພຣະນາມຂອງພຣະອົງ."
20ຂະນະທີ່ຂ້າພະເຈົ້າກໍາລັງເວົ້າຢູ່ນີ້ ກໍາລັງອະທິຖານແລະກໍາລັງສາລະພາບບາບຂອງຂ້າພະເຈົ້າແລະບາບຂອງປະຊາຊົນ ອິດສະຣາເອນ,
ຂອງຂ້າພະເຈົ້າແລະສະເຫນີຄໍາອ້ອນວອນຕໍ່ຫນ້າພຣະຢາເວ ພຣະເຈົ້າຂອງຂ້າພະເຈົ້າໃນນາມຂອງພູເຂົາບໍຣິສຸດຂອງພຣະອົງ.
21ຂະນະເມື່ອຂ້າພະເຈົ້າກ່າວຄໍາອະທິຖານ ຜູ້ຊາຍທີ່ຊື່ຄັບຣີເອນ, ຊຶ່ງຂ້າພະເຈົ້າໄດ້ຫັນໃນນິມິດ,
ຄັ້ງທໍາອິດນັ້ນໄດ້ບິນລົງມາຫາຂ້າພະເຈົ້າຢ່າງໄວ ໃນເວລາຖວາຍເຄື່ອງບູຊາຕອນແລງ.

[22]ເຂົາໄດ້ກ່າວອະທິບາຍໃຫ້ແກ່ຂ້າພະເຈົ້າໄດ້ເຂົ້າໃຈ ແລະໄດ້ວ່າ, “ໂອ ດານີເອນ, ເຮົາມາທີ່ນີ້ເພື່ອຊ່ວຍເຈົ້າ ບັດນີ້
ເພື່ອຈະໃຫ້ຄວາມກະຈ່າງແລະຄວາມເຂົ້າໃຈແກ່ເຈົ້າ. [23]ເມື່ອເຈົ້າໄດ້ເລີ່ມຕົ້ນອ້ອນວອນຂໍຄວາມເມດຕາ
ກໍມີຄຳສັ່ງແລະເຮົາກໍໄດ້ມາແຈ້ງຄຳຕອບແກ່ເຈົ້າທັນທີ, ເພາະເຈົ້າເປັນຜູ້ທີ່ຊົງຮັກ.
ຫລາຍເພາະສະນັ້ນຈົ່ງພິຈາລະນາຄຳຕອບແລະເຂົ້າໃຈແລະການອະທິບາຍນັ້ນ.
[24]ເຈັດສິບອາທິດ ຂອງປີຕ່າງໆ ໄດ້ກຳນົດໄວ້ສຳຫລັບປະຊາຊົນຂອງເຈົ້າແລະເມືອງບໍລິສຸດຂອງເຈົ້າ ເພື່ອຢຸດຕິຄວາມຜິດແລະໃຫ້ບາບຈົບສິ້ນ,
ໃຫ້ລົບລ້ມົນທິນ ເພື່ອນຳຄວາມຊອບທຳນິລັນດອນເຂົ້າມາ ໃຫ້ນຳນິມິດແລະຄຳຂອງຜູ້ທຳນວຍຖ້ອຍຄຳອອກໄປແລະເພື່ອຈະເຈີມສະຖານສັກສິດ.
[25]ຈົ່ງຮັບຮູ້ແລະເຂົ້າໃຈວ່າ ນັບຕັ້ງແຕ່ການທີ່ພຣະຄຳສັ່ງນັ້ນອອກໄປໃຫ້ປັບປຸງແລະສ້າງກຸງເຢຣູຊາເລັມຂຶ້ນໃໝ່
ຈົນເຖິງການມາຂອງຜູ້ທີ່ຊົງຖືກເຈີມໄວ້ (ຜູ້ທີ່ຈະເປັນຜູ້ນຳ) ຈະມີເຈັດອາທິດ ແລະຫົກສິບສອງອາທິດ.
ກຸງເຢຣູຊາເລັມຈະຖືກສ້າງຂຶ້ນໃໝ່ພ້ອມດ້ວຍຫົນທາງແລະຄູເມືອງ, ແຕ່ຈະເກີດຂຶ້ນໃນຊ່ວງເວລາຍາກລຳບາກ.
[26]ຫລັງຈາກຫົກສິບສອງອາທິດຂອງປີຕ່າງໆ ແລ້ວ ຜູ້ທີ່ຖືກເຈີມຈະຕ້ອງຖືກທຳລາຍລົງແລະຈະບໍ່ມີຫຍັງເຫລືອ
ກອງທັບຂອງຜູ້ປົກຄອງຜູ້ທີ່ຈະມານັ້ນຈະທຳລາຍເມືອງແລະສະຖານບໍຣິສຸດ. ຄວາມສິ້ນສຸດຈະມາເຖິງດ້ວຍນ້ຳຖ້ວມ,
ແລະຈະມີສົງຄາມຈົນກະທັ້ງໃນຕອນສຸດທ້າຍ. ແລະການຮົກຮ້າງວ່າງເປົ່າໄດ້ຖືກກຳຫນົດໄວ້ແລ້ວ.
[27]ເຂົາຈະຢືນຢັນຄຳສັນຍາກັບຄົນເປັນຈຳນວນຫລາຍຢູ່ຫນຶ່ງອາທິດ. ໃນກາງອາທິດເຂົາຢຸດການຖວາຍສັດບູຊາແລະເຄື່ອງບູຊາ
ໃນປີກຂອງສິ່ງຫນ້າລັງກຽດຈະມາເຖິງຄົນທີ່ເຮັດໃຫ້ວ່າງເປົ່າຕັ້ງຢູ່
ການສິ້ນສຸດແລະການທຳລາຍໄດ້ຖືກກຳຫນົດໄວ້ໃຫ້ຖືກເທລົງເຫນືອຜູ້ເຮັດໃຫ້ເກີດຄວາມວ່າງເປົ່ານັ້ນ.”


generated on Tue Jun 17 19:01:42 2025

10 [1]ໃນປີທີສາມແຫ່ງຣາຊການ ເຈົ້າໄຊຣັດກະສັດແຫ່ງເປີເຊຍ, ມີຂ່າວສານໄດ້ເປີດເຜີຍແກ່ດານີເອນ, ຜູ້ຊຶ່ງມີອີກຊື່ຫນຶ່ງວ່າ ເບັນເຕຊັດຊາເຣ.
ຂ່າວສານນີ້ກໍເປັນຄວາມຈິງ. ເປັນເລື່ອງກ່ຽວກັບສົງຄາມ. ດານີເອນໄດ້ເຂົ້າໃຈເຖິງຂ່າວສານນີ້ເມື່ອເຂົາໄດ້ມີຄວາມເຂົ້າໃຈຈາກນິມິດ.

[2]ໃນສະໄຫມນັ້ນ ຂ້າພະເຈົ້າ, ດານີເອນ, ໄວ້ທຸກຢູ່ສາມອາທິດ.[3]ຂ້າພະເຈົ້າບໍ່ໄດ້ກິນອາຫານຊັ້ນສູງ, ຂ້າພະເຈົ້າບໍ່ໄດ້ກິນຊີ້ນ,
ຂ້າພະເຈົ້າບໍ່ໄດ້ດື່ມເຫລົ້າອະງຸ່ນ, ແລະຂ້າພະເຈົ້າບໍ່ໄດ້ຊະໂລມຕົວຂ້າພະເຈົ້າເອງດ້ວຍນ້ຳມັນຈົນກະທັ້ງສາມອາທິດເຕັມ.
[4]ເມື່ອມື້ທີຊາວສີ່ຂອງເດືອນທີຫນຶ່ງ ຂະນະທີ່, ຂ້າພະເຈົ້າຢືນຢູ່ທີ່ແຄມແມ່ນ້ຳໃຫຍ່ (ນັ້ນຄືແມ່ນ້ຳ, ຕີກຣິດ),
[5]ຂ້າພະເຈົ້າໄດ້ເງີຍຫນ້າຂຶ້ນແລະໄດ້ເຫັນຊາຍຄົນຫນຶ່ງສວມເສື້ອຜ້າປ່ານ ແລະຂັດສາຍແອວທີ່ເຮັດຈາກຄຳເມືອງອູຟາດ.
[6]ຮ່າງກາຍຂອງເຂົາເຫມືອນດັ່ງບຸດສະລາຄຳ, ແລະຫນ້າຂອງເພິ່ນກໍເຫມືອນຟ້າແມບ. ດວງຕາຂອງເພິ່ນກໍເຫມືອນກັບເປວໄຟຂອງຄົບເພີງ,
ແລະແຂນຂອງເພິ່ນແລະຕີນຂອງເພິ່ນເປັນເງົາງາມເຫມືອນກັບທອງສຳຣິດຂັດ, ສຽງຖ້ອຍຄຳຂອງເພິ່ນເຫມືອນສຽງມວນຊົນຂະຫນາດໃຫຍ່.
[7]ຂ້າພະເຈົ້າ, ດານີເອນ, ໄດ້ເຫັນນິມິດແຕ່ພຽງຜູ້ດຽວ, ບັນດາຄົນທີ່ຢູ່ກັບຂ້າພະເຈົ້າບໍ່ໄດ້ເຫັນນິມິດນັ້ນ. ຢ່າງໃດກໍຕາມ,
ພວກເຂົາຢ້ານຈົນຕົວສັ່ນ, ແລະພວກເຂົາໄດ້ແລ່ນໄປລີ້ຊ້ອນ.[8]ດັ່ງນັ້ນ ຂ້າພະເຈົ້າຈຶ່ງຖືກຖິ້ມໃຫ້ຢູ່ແຕ່ຄົນດຽວແລະໄດ້ເຫັນນິມິດຍິ່ງໃຫຍ່ນີ້.
ຂ້າພະເຈົ້າບໍ່ມີເຫື່ອແຮງເຫລືອຢູ່; ແລະສີຫນ້າກໍປ່ຽນແປງໄປຈົນບໍ່ມີຜູ້ໃດສາມາດຈື່ຂ້າພະເຈົ້າ, ແລະຂ້າພະເຈົ້າຫມົດແຮງ.
[9]ແລ້ວຂ້າພະເຈົ້າຈຶ່ງໄດ້ຍິນສຽງຖ້ອຍຄຳຂອງເພິ່ນ ເມື່ອຂ້າພະເຈົ້າໄດ້ຍິນສຽງຖ້ອຍຄຳນັ້ນຂ້າພະເຈົ້າກໍຫມົດສະຕິລົ້ມລົງພື້ນດິນ,
ແລະຫມູບຫນ້າຢູ່ທີ່ນັ້ນ.
[10]ມີມືໄດ້ມາແຕະຂ້າພະເຈົ້າ, ເຮັດໃຫ້ອຸ້ງມືແລະເຂົ່າຂອງຂ້າພະເຈົ້າສັ່ນ.[11]ທູດສະຫວັນໄດ້ກ່າວແກ່ຂ້າພະເຈົ້າວ່າ, "ດານີເອນ,
ຜູ້ເປັນທີ່ຮັກຢ່າງຍິ່ງ, ຈົ່ງເຂົ້າໃຈບັນດາຖ້ອຍຄຳທີ່ເຮົາກຳລັງເວົ້າກັບເຈົ້າ. ຈົ່ງຢືນຂຶ້ນ, ເພາະວ່າເຮົາຖືກໃຊ້ໃຫ້ມາຫາເຈົ້າ."
ເມື່ອເພິ່ນໄດ້ກ່າວຂ່າວສານນີ້ແກ່ຂ້າພະເຈົ້າ, ຂ້າພະເຈົ້າກໍໄດ້ຢືນສັ່ນສະທ້ານຢູ່,
[12]ແລ້ວເພິ່ນໄດ້ເວົ້າກັບຂ້າພະເຈົ້າ, "ດານີເອນ. ເອີຍຢ່າຢ້ານເລີຍ ຕັ້ງແຕ່ມື້ທຳອິດທີ່ເຈົ້າຕັ້ງໃຈຈະເຂົ້າໃຈແລະຖ່ອມຕົວລົງຕໍ່ຫນ້າພຣະເຈົ້າ,
ຂອງເຈົ້ານັ້ນ ພຣະເຈົ້າຊົງຟັງຖ້ອຍຄຳຂອງເຈົ້າ, ແລະເຮົາໄດ້ມາດ້ວຍເລື່ອງຖ້ອຍຄຳຂອງເຈົ້ານັ້ນເອງ.
[13]ເຈົ້າຜູ້ຄອງອານາຈັກເປີເຊຍໄດ້ຂັດຂວາງເຮົາ, ແລະເຮົາຖືກກັກຕົວໄວ້ກັບເຫລົ່າກະສັດຂອງ ເປີເຊຍ ເຖິງຊາວເອັດມື້. ແຕ່ມີຄາເອນ,
ເຈົ້າຜູ້ຄອງທີ່ມີອຳນາດສູງສຸດຜູ້ຫນຶ່ງ, ໄດ້ມາຊ່ວຍເຮົາ.
[14]ບັດນີ້ ເຮົາໄດ້ມາເພື່ອຊ່ວຍໃຫ້ເຈົ້າເຂົ້າໃຈເຖິງສິ່ງຊຶ່ງຈະເກີດຂຶ້ນກັບປະຊາຊົນຂອງເຈົ້າໃນວັນສິ້ນຍຸກ.
ເພາະນິມິດນັ້ນກ່ຽວກັບເວລາພາຍຫນ້າ."[15]ຂະນະທີ່ເພິ່ນກຳລັງເວົ້າກັບຂ້າພະເຈົ້າໂດຍໃຊ້ຖ້ອຍຄຳເຫລົ່ານີ້,
ຂ້າພະເຈົ້າໄດ້ກົ້ມຫນ້າລົງດິນແລະກໍບໍ່ສາມາດເວົ້າໄດ້.
[16]ມີຜູ້ຫນຶ່ງທີ່ເບິ່ງເຫມືອນມະນຸດໄດ້ມາແຕະຮີມສົບປາກຂ້າພະເຈົ້າ,
ແລະຂ້າພະເຈົ້າກໍໄດ້ອ້າປາກແລະໄດ້ເວົ້າກັບເພິ່ນທີ່ຢືນຢູ່ຂ້າງຫນ້າຂ້າພະເຈົ້າວ່າ: "ນາຍຂອງຂ້າພະເຈົ້າ,
ຂ້າພະເຈົ້າຢູ່ໃນຄວາມເຈັບປວດເຫດເພາະນິມິດ; ຂ້າພະເຈົ້າ ກໍຫມົດແຮງ.[17]ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງທ່ານ.
ຂ້າພະເຈົ້າຈະເວົ້າກັບເຈົ້ານາຍຂອງຂ້າພະເຈົ້າໄດ້ຢ່າງໃດ? ເພາະບັດນີ້ບໍ່ມີກຳລັງເຫລືອຢູ່ໃນຂ້າພະເຈົ້າເລີຍ,
ແລະບໍ່ມີລົມຫາຍໃຈເຫລືອໃນຂ້າພະເຈົ້າແລ້ວ."
[18]ຜູ້ມີຮູບຮ່າງຢ່າງມະນຸດນັ້ນໄດ້ແຕະຕ້ອງຂ້າພະເຈົ້າອີກຄັ້ງຫນຶ່ງແລະໃຫ້ກຳລັງແກ່ຂ້າພະເຈົ້າ.[19]ເພິ່ນໄດ້ກ່າວວ່າ,
"ທ່ານຜູ້ເປັນທີ່ຮັກຍິ່ງຢ່າຢ້ານເລີຍ, ຂໍໃຫ້ສັນຕິສຸກຈົ່ງມີແກ່ເຈົ້າ! ຈົ່ງເຂັ້ມແຂງ, ບັດນີ້ຈົ່ງເຂັ້ມແຂງເຖີດ!"
ຂະນະທີ່ເພິ່ນກຳລັງເວົ້າກັບຂ້າພະເຈົ້ານັ້ນ, ຂ້າພະເຈົ້າມີກຳລັງຂຶ້ນ. ຂ້າພະເຈົ້າໄດ້ເວົ້າວ່າ,"ຂໍເຈົ້ານາຍຂອງຂ້າພະເຈົ້າເວົ້າເຖີດ,
ເພາະທ່ານໄດ້ໃຫ້ຂ້ານ້ອຍມີແຮງຂຶ້ນແດ່ແລ້ວ."
[20]ເພິ່ນໄດ້ກ່າວວ່າ, "ເຈົ້າຮູ້ຫລືບໍ່ວ່າເຮົາມາຫາເຈົ້າເຮັດຫຍັງ? ໃນບໍ່ຊ້າເຮົາຈະກັບໄປຕໍ່ສູ້ກັບເຈົ້າຜູ້ຄອງ ເປີເຊຍ. ເມື່ອເຮົາໄປແລ້ວ,
ເຈົ້າຜູ້ຄອງກຣີດຈະມາ.[21]ແຕ່ເຮົາຈະບອກເຈົ້າຕາມສິ່ງຊຶ່ງບັນທຶກໄວ້ໃນຫນັງສືແຫ່ງຄວາມຈິງ
ບໍ່ມີໃຜທີ່ສະແດງຕົວຂອງເຂົາຮ່ວມແຮງກັບເຮົາຕໍ່ສູ້ພວກເຂົາເລີຍ, ນອກຈາກ ມີຄາເອນ ເຈົ້າຜູ້ຄອງຂອງທ່ານ."

 generated on Tue Jun 17 19:01:42 2025

11 [1]ໃນປີທີຫນຶ່ງແຫ່ງຣາຊການດາຣິອຸດຊາວມີເດຍ, ເຮົາໄດ້ມາເພື່ອສະຫນັບສະຫນຸນແລະປົກປ້ອງມີຄາເອນ.[2]ບັດນີ້
ເຮົາຈະບອກຄວາມຈິງແກ່ເຈົ້າ ຈະມີກະສັດອີກສາມ ພະອົງ. ຂຶ້ນຄອງເປີເຊຍ, ແລະອົງທີສີ່ຈະຮັ່ງມີຍິ່ງກວ່າອົງອື່ນທັງຫມົດ.
ເມື່ອພະອົງຊິງມີອຳນາດດ້ວຍຄວາມຮັ່ງມີຂອງພະອົງແລ້ວ, ພະອົງກໍຈະຊິງປຸກປັ່ນໃຫ້ທຸກຄົນຕໍ່ສູ້ກັບຣາຊອານາຈັກກຣີດ.

[3]ແລ້ວຈະມີກະສັດຜູ້ເກັ່ງກ້າຂຶ້ນມາ ພະອົງຈະຊົງປົກຄອງດ້ວຍອຳນາດຍິ່ງໃຫຍ່, ແລະເຮັດຕາມທີ່ພະອົງຊົງພໍໃຈ.
[4]ເມື່ອພະອົງໄດ້ຊົງເກີດຂຶ້ນມາແລ້ວ, ຣາຊອານາຈັກຂອງພະອົງກໍຈະແຕກ ແລະຖືກແບ່ງແຍກອອກໄປຕາມທາງລົມທັງສີ່ແຫ່ງຟ້າ,
ແຕ່ຈະບໍ່ຕົກຢູ່ກັບເຊື້ອສາຍຂອງພະອົງ, ແລະຈະບໍ່ມີອຳນາດຢ່າງທີ່ພະອົງຊົງປົກຄອງຢູ່ເພາະວ່າຣາຊອານາຈັກຂອງພະອົງຈະຖືກຖອນອອກ
ແລະຕົກໄປເປັນຂອງຜູ້ອື່ນນອກຈາກເຊື້ອສາຍຂອງພະອົງ
[5]ກະສັດແຫ່ງຖິ່ນໃຕ້ຈະຊົງເຂັ້ມແຂງຂຶ້ນ, ແຕ່ແມ່ທັບຄົນຫນຶ່ງໃນເຫລົ່າແມ່ທັບຂອງພະອົງຈະເຂັ້ມແຂງກວ່າພະອົງ
ແລະຈະຄອບຄອງອານາຈັກຂອງພຣະອົງດ້ວຍອຳນາດຍິ່ງໃຫຍ່.[6]ຕໍ່ມາອີກສອງສາມປີເມື່ອເຖິງເວລາທີ່ເຫມາະສົມ,
ກະສັດທັງສອງພະອົງຈະຊົງເປັນພັນທະມິດກັນ ລູກສາວຂອງກະສັດແຫ່ງຖິ່ນໃຕ້ຈະມາຫາກະສັດແຫ່ງຖິ່ນເຫນືອ ເພື່ອຢືນຢັນຂໍ້ສັນຍາ
ແຕ່ນາງຈະບໍ່ຮັກສາກຳລັງແຂນຂອງນາງ ແລະອຳນາດຂອງກະສັດຈະບໍ່ຢັ້ງຢືນ ຫລືແຂນຂອງພະອົງ ນາງຈະຖືກປະຖິ້ມ
ນາງແລະບັນດາຜູ້ທີ່ນຳນາງມາ ແລະພໍ່ຂອງນາງ ແລະຜູ້ທີ່ສະຫນັບສະຫນູນນາງໃນເວລານັ້ນ
[7]ແຕ່ຄົນຫນຶ່ງຈາກເຊື້ອສາຍຂອງນາງຈະຂຶ້ນມາແທນທີ່ນາງ. ພະອົງຈະຊົງຍົກມາຕໍ່ສູ້ກັບກອງທັບ ແລະເຂົ້າໃນປ້ອມຂອງກະສັດແຫ່ງຖິ່ນເຫນືອ.
ພະອົງຈະຊົງລົບກັບພວກເຂົາແລະຈະຊະນະພວກເຂົາ.[8]ພະອົງຈະຊົງຂົນໄປຍັງເອຢິບ ຄືບັນດາພະພ້ອມທັງຮູບຫລໍ່ເທັກຂອງພະທັງຫລາຍ
ແລະບັນດາພາຊະນະມີຄ່າທີ່ເຮັດດ້ວຍເງິນແລະທອງຄຳຂອງພວກເຂົາເພາະວ່າໃນບາງປີພະອົງຈະຊົງຢູ່ຫ່າງຈາກກະສັດແຫ່ງຖິ່ນເຫນືອ.
[9]ແລ້ວກະສັດແຫ່ງຖິ່ນເຫນືອຈະບຸກເຂົ້າມາໃນເຂດກະສັດແຫ່ງຖິ່ນໃຕ້ ແຕ່ພະອົງກໍຈະຖອຍກັບໄປຍັງແຜ່ນດິນຂອງພະອົງເອງ.
[10]ລູກທັງຫລາຍຂອງພະອົງຕຽມພ້ອມແລະລວບລວມກອງທັບຍິ່ງໃຫຍ່ຫລາຍ.
ຊຶ່ງຈະຍົກມາຕໍ່ເນື່ອງແລະຈະຕີຊະນະຢ່າງໄວວາເຫມືອນນໍ້າໄຫລຖ້ວມທຸກສິ່ງແລະຈະຜ່ານໄປຈົນເຖິງປ້ອມປາການຂອງພະອົງ
[11]ແລ້ວກະສັດແຫ່ງຖິ່ນໃຕ້ຈະຊົງໂກດຮ້າຍຫລາຍ ພະອົງຈະຊົງຍົກອອກມາຕໍ່ສູ້ກັບກະສັດແຫ່ງຖິ່ນເຫນືອ
ກະສັດແຫ່ງຖິ່ນເຫນືອຈະຈັດກອງທັບຍິ່ງໃຫຍ່ຫລາຍ ແຕ່ກອງທັບນັ້ນກໍຈະຖືກມອບໄວ້ໃນມືຂອງພະອົງ[12]ກອງທັບຈະຖືກຮວບໄປ,
ແລະໃຈຂອງກະສັດແຫ່ງຖິ່ນໃຕ້ກໍພະຫຍອງຂຶ້ນ, ແລະພະອົງຈະຊົງທຳລາຍຄົນເປັນຫມື່ນໆ, ແຕ່ພະອົງບໍ່ໄດ້ຮັບໄຊຊະນະ.
[13]ແລ້ວກະສັດແຫ່ງຖິ່ນເຫນືອຈະຈັດກອງທັບອີກກອງທັບຫນຶ່ງ ໃຫຍ່ໂຕກວ່າຄັ້ງທຳອິດ ຕໍ່ມາອີກຫລາຍປີ,
ກະສັດແຫ່ງຖິ່ນເຫນືອຈະຍົກກອງທັບໃຫຍ່ນັ້ນມາພ້ອມກັບສະບຽງອຸດົມສົມບູນຢ່າງແນ່ນອນ.
[14]ໃນເວລານັ້ນ ຫລາຍກຸ່ມຈະຍົກຂຶ້ນຕໍ່ສູ້ກັບກະສັດແຫ່ງຖິ່ນໃຕ້.
ລູກຊາຍທັງຫລາຍທີ່ຫົວຮຸນແຮງທ່າມກາງປະຊາຊົນຂອງພະອົງກໍຈະຍົກຕົວຂຶ້ນເພື່ອຈະເຮັດໃຫ້ນິມິດ, ສຳເລັດ ແຕ່ພວກເຂົາຈະຫລົ້ມເຫລວ.
[15]ກະສັດແຫ່ງຖິ່ນເຫນືອຈະມາເທເນີນດິນເພື່ອລ້ອມໄວ້, ແລະຍຶດເມືອງທີ່ມີປ້ອມແຂງແຮງ ສ່ວນກຳລັງກອງທັບຂອງຖິ່ນໃຕ້ຈະສູ້ບໍ່ໄຫວ
ແມ່ນວ່າຈະມີບັນດາທະຫານທີ່ດີທີ່ສຸດຂອງພວກເຂົາ ຈະບໍ່ມີກຳລັງຢືນຢັດຢູ່ໄດ້.[16]ແຕ່ຜູ້ຍົກມາຕໍ່ສູ້ກັບພະອົງຈະເຮັດຕາມທີ່ພະອົງຊົງພໍໃຈ;
ຈຶ່ງບໍ່ມີໃຜຕໍ່ສູ້ພະອົງ. ໄດ້ແລະພະອົງຈະຢັ້ງຢືນຢູ່ໃນແຜ່ນດິນອັນຮຸ່ງເຮືອງ, ແລະການທຳລາຍຈະຢູ່ໃນອຳນາດຂອງພະອົງ.
[17]ກະສັດແຫ່ງຖິ່ນເຫນືອຈະມຸ່ງຫນ້າມາດ້ວຍກຳລັງຂອງຣາຊອານາຈັກທັງຫມົດຂອງພະອົງ,
ແລະພະອົງຈະນຳຂໍ້ຕົກລົງມາສະເຫນີແລະພະອົງຈະຊົງເຮັດກັບກະສັດແຫ່ງແຜ່ນດິນໃຕ້
ແລະພະອົງຈະຊົງຍົກລູກສາວອົງຫນຶ່ງເພື່ອແຕ່ງງານເພື່ອໃຫ້ທຳລາຍຣາຊອານາຈັກແຫ່ງຖິ່ນໃຕ້
ແຕ່ແຜນການຈະບໍ່ເປັນຜົນສຳເລັບຫລືເປັນປະໂຫຍດແກ່ພຣະອົງ[18]ພາຍຫລັງຈາກນີ້ກະສັດແຫ່ງຖິ່ນເຫນືອຈະມຸ່ງສົນໃຈເມືອງຊາຍຝັ່ງທະເລ
ແລະຈະຊົງຍຶດໄດ້ຫລາຍເມືອງ. ແຕ່ແມ່ທັບຄົນຫນຶ່ງຈະກຳຈັດຄວາມພະຫຍອງຂອງພະອົງ
ແລະຈະເອົາຄວາມພະຫຍອງນັ້ນມາສະຫນອງພະອົງ.
[19]ແລ້ວພະອົງຈະຊົງຫັນຫນ້າມຸ່ງຕົງໄປຍັງບັນດາປ້ອມປາການແຫ່ງແຜ່ນດິນຂອງພະອົງເອງ, ແຕ່ພະອົງກໍຈະຊົງສະດຸດແລະຊົງລົ້ມລົງ
ຈະຫາຕົວພະອົງບໍ່ພົບອີກຕໍ່ໄປ.
[20]ແລ້ວຈະມີຜູ້ຫນຶ່ງຂຶ້ນມາແທນທີ່ພະອົງຜູ້ນີ້ຈະສົ່ງເຈົ້າພະນັກງານເກັບສ່ວຍໃຫ້ໄປທົ່ວເພື່ອຄວາມຮຸ່ງເຮືອງຂອງຣາຊອານາຈັກ
ແຕ່ບໍ່ຈັກມື້ເຂົາກໍປະສົບຫາຍະນະ
ບໍ່ແມ່ນດ້ວຍຄວາມໂກດຫລືສົງຄາມ[21]ໃນຕຳແຫນ່ງຂອງເຂົາຈະມີຄົນຫນ້າກຽດຄົນຫນຶ່ງຕັ້ງຕົວຂຶ້ນແທນທີ່ຜູ້ຊຶ່ງປະຊາຊົນບໍ່ໄດ້ໃຫ້ກຽດຂອງອຳນາດຣາຊວົງ
ເຂົາຈະຍົກເຂົ້າມາໂດຍບໍ່ບອກກ່າວ ແລ້ວຊົງເອົາຣາຊອານາຈັກນັ້ນດ້ວຍເລ່ກົນ.
[22]ກອງທັບທັງຫລາຍຈະຖືກກວາດໄປຫມົດເຫມືອນຖືກນ້ຳຖ້ວມຕໍ່ຫນ້າພະອົງ ທັງກອງທັບແລະຜູ້ນຳແຫ່ງຄຳສັນຍາຈະຖືກທຳລາຍດ້ວຍ.
[23]ຕັ້ງແຕ່ເວລາທີ່ເປັນພັນທະມິດກັບພະອົງ, ພະອົງຈະເຮັດການລໍ້ລວງຢູ່ສະເຫມີ; ດ້ວຍຈຳນວນປະຊາຊົນບໍ່ຫລາຍພະອົງຈະຊົງເຂັ້ມແຂງຂຶ້ນ.
[24]ໂດຍບໍ່ມີການເຕືອນພະອົງຈະຊົງຍົກເຂົ້າມາໃນສ່ວນຂອງແຂວງຊຶ່ງອຸດົມທີ່ສຸດ
ແລະພະອົງຈະຊົງເຮັດສິ່ງທີ່ປູ່ທວດຫລືເຊື້ອສາຍຂອງພະອົງບໍ່ເຮັດ ພະອົງຈະຊົງເອົາຊັບທີ່ປຸ້ນມາ ຂອງທີ່ຮິບມາໄດ້ ແລະເຂົ້າຂອງຕ່າງໆ
ມາແຈກຢາຍກັນໃນພວກທີ່ຕິດຕາມພະອົງ, ພະອົງຈະຊົງອອກອຸບາຍຕໍ່ສູ້ກັບທີ່ກຳລັງເຂັ້ມແຂງ ແຕ່ກໍຊົ່ວເວລາຫນຶ່ງເທົ່ານັ້ນ.
[25]ແລະພະອົງຈະປຸກປັ່ນກຳລັງຂອງພະອົງ ແລະຄວາມກ້າຫານຍົກໄປສູ້ກັບກະສັດ ແຫ່ງຖິໃຕ້ດ້ວຍກອງທັບຍິ່ງໃຫຍ່.
ແລະກະສັດແຫ່ງຖິ່ນໃຕ້ຈະເຮັດສົງຄາມ ດ້ວຍກອງທັບເຂັ້ມແຂງຍິ່ງໃຫຍ່ຫລາຍ, ແຕ່ພະອົງກໍສູ້ບໍ່ໄດ້ເພາະມີການປອງຮ້າຍພະອົງ.
[26]ເຖິງແມ່ນຜູ້ຮັບປະທານອາຫານຊັ້ນສູງຂອງພະອົງ. ກໍຈະຫັກຫລັງພະອົງ, ແລະກອງທັບພະອົງກໍຈະຖືກກວາດໄປ
ທີ່ຖືກຂ້າຟັນລົ້ມຕາຍຈະມີຫລາຍ.[27]ສ່ວນກະສັດ, ສອງອົງນັ້ນຈິດໃຈຕ່າງຄິດປອງຮ້າຍ ຈະນັ່ງຮ່ວມໂຕະແລະເວົ້າຕົວະກັນ,
ແຕ່ກໍບໍ່ໄດ້ຜົນເພາະວາລະສຸດທ້າຍກໍຈະມາຕາມເວລາກຳນົດ.
[28]ແລ້ວກະສັດແຫ່ງຖິ່ນເຫນືອກໍຈະກັບເຂົ້າບ້ານເຂົ້າເມືອງພ້ອມກັບຊັບສົມບັດຫລວງຫລາຍ, ແຕ່ຈິດໃຈກໍມຸ້ງຮ້າຍຕໍ່ພັນທະສັນຍາບໍລິສຸດ.
ພະອົງຈະລົງມືເຮັດຕາມໃຈຊອບແລະກັບເມືອງຂອງພະອົງ.

[29]ພໍເຖິງເວລາກຳນົດພະອົງຈະສະເດັດກັບມາທີ່ຖິ່ນໃຕ້ ແຕ່ຄັ້ງນີ້ເຫດການຈະບໍ່ເປັນໄປຢ່ສຄັ້ງກ່ອນ.
[30]ເພາະວ່າກອງທັບເຮືອຂອງເມືອງກິທິມມາປະທະກັບພະອົງ, ພະອົງຈະຢ້ານກວາແລະກັບໄປແລະຈະກິ້ວໂກດຕໍ່ພັນທະສັນຍາບໍລິສຸດ,
ແລະລົງມືປະຕິບັດງານ ພະອົງຈະຊົງຫັນຫັບມາສົນໃຈບັນດາຜູ້ປະຖິ້ມພັນທະສັນຍາບໍລິສຸດ.
[31]ກອງທັບຂອງພະອົງຈະຍົກມາເຮັດໃຫ້ສະຖານນະມັດສະການຄືປ້ອມປະການເປັນມົນທິນ.
ພວກເຂົາຈະໃຫ້ເລີກເຄື່ອງເຜົາບູຊາເບື່ອງນິດນັ້ນເສຍ, ແລະພວກເຂົາຈະຕັ້ງສິ່ງທີ່ຫນ້າລັງກຽດຊຶ່ງເຮັດໃຫ້ເກີດການຮົກຮ້າງວ່າງເປົ່າຂຶ້ນ.
[32]ສຳລັບຄົນເຫລົ່ານັ້ນທີ່ໃຊ້ເລ້ຫລ່ຽມຫລອກລວງຜູ້ລະເມີດພັນທະສັນຍາ. ແຕ່ບັນດາປະຊາຊົນທີ່ຊື່ສັດຕໍ່ພຣະເຈົ້າຂອງຕົນຈະຢືນຢັດຕໍ່ສູ້.
[33]ແລະຄົນເຫລົ່ານັ້ນທີ່ສະຫລາດຈະເຮັດໃຫ້ຄົນຈຳນວນຫລາຍເຂົ້າໃຈ, ແຕ່ພວກເຂົາຈະລົ້ມລົງດ້ວຍດາບຫລືດ້ວຍແປວໄຟ
ດ້ວຍການເປັນຊະເລີຍຫລືດ້ວຍຖືກປຸ້ນຊິວໄລຍະເວລາຫນຶ່ງກໍຕາມ.[34]ເມື່ອພວກເຂົາລົ້ມລົງນັ້ນ, ພວກເຂົາຈະໄດ້ຮັບຄວາມຊ່ວຍເຫລືອເລັກນ້ອຍ
ແລະຈະມີຄົນຈຳນວນຫລາຍເຂົ້າຮ່ວມຢ່າງບໍ່ຈິງໃຈ.
[35]ຄົນສະຫລາດບາງຄົນຈະລົ້ມລົງແລະເພື່ອພວກເຂົາຈະຖືກຊໍາລະລ້າງໃຫ້ບໍລິສຸດກວ່າຈະເຖິງວາລະສຸດທ້າຍ.
ເພາະວາລະກໍຈະມາຕາມເວລາກຳນົດ.
[36]ກະສັດຈະກະທຳຕາມຄວາມປາຖະຫນາ ຂອງລາວຂອງຕົນເອງ. ພະອົງຈະຊົງຍົກຕົນຂຶ້ນແລະພອງຕົວຂຶ້ນເຫນືອເທບພະເຈົ້າທຸກອົງ.
ແລະຈະເວົ້າສິ່ງທີ່ຫນ້າກຽດຕໍ່ສູ້ພຣະເຈົ້າອົງສູງສຸດ, ພະອົງຈະຊົງຈະເລີນຂຶ້ນຈົນກວ່າຄວາມໂກດຮ້າຍຈະຄົບຖ້ວນ.
ເພາະສິ່ງໃດທີ່ຊົງກຳນົດໄວ້ຈະຕ້ອງສຳເລັດ.[37]ພະອົງຈະບໍ່ເຊື່ອຟັງບັນດາພະແຫ່ງບັນພະບູລຸດຂອງພະອົງ, ຫລືພະທີ່ພວກຜູ້ຍິງຮັກແລະນັບຖືນັ້ນ
ພະອົງຈະບໍ່ເຊື່ອພະເຈົ້າອື່ນໃດເລີຍ. ເພາະພະອົງຈະຖືວ່າໂຕເອງໃຫຍ່ກວ່າທຸກສິ່ງທຸກຢ່າງ.
[38]ພະອົງຈະຊົງຍົກຍ້ອງພະເຈົ້າຂອງບັນດາປ້ອມປາການແທນສິ່ງເຫລົ່ານີ້. ພະເຈົ້າອີກອົງຫນຶ່ງທີ່ບັນພະບູລຸດຂອງພະອົງບໍ່ຮູ້ຈັກ
ພະອົງຈະໃຫ້ກຽດດ້ວຍທອງຄຳແລະເງິນ, ດ້ວຍເພັດນິນຈິນດາແລະຂອງຖວາຍອັນມີຄ່າ.[39]ພະອົງຈະສູ້ລົບກັບປ້ອມປະການທີ່ແຂງແຮງທີ່ສຸດ
ຄວາມຊ່ວຍເຫລືອຂອງພະຕ່າງດ້າວ ໃຜໆທີ່ນັບຖືພະອົງ, ພະອົງກໍຊົງມອບກຽດໃຫ້ຢ່າງຫລາຍ.
ພະອົງຈະຊົງແຕ່ງຕັ້ງໃຫ້ພວກເຂົາຄອບຄອງຄົນເປັນຈຳນວນຫລາຍ, ແລະພະອົງຈະຊົງແບ່ງທີ່ດິນໃຫ້ເປັນສິ່ງຕອບແທນ.
[40]ພໍເຖິງວາລະສຸດທ້າຍກະສັດແຫ່ງຖິ່ນໃຕ້ຈະມາໂຈມຕີ. ກະສັດແຫ່ງຖິ່ນເຫນືອຈະພຸ່ງເຂົ້າໃສ່ພະອົງຢ່າງລົມບ້າຫມູ ພ້ອມດ້ວຍລົດມ້າເສິກ,
ແລະເຮືອລົບເປັນຈຳນວນຫລາຍ. ພະອົງຈະບຸກເຂົ້າປະເທດຕ່າງໆແລ້ວຍົກກອງທັບຜ່ານເຫມືອນນໍ້າຖ້ວມ.
[41]ພະອົງຈະເຂົ້າມາໃນແຜ່ນດິນອັນຮຸ່ງເຮືອງ, ແລະປະຊາຊົນຈະຕາຍເປັນຫມື່ນໆ. ແຕ່ເອໂດມ, ໂມອາບ, ແລະສ່ວນໃຫຍ່ຂອງຄົນອຳໂມນ
ຈະພົ້ນຈາກມືຂອງເຂົາ.
[42]ເຂົາຈະຂະຫຍາຍອຳນາດຄອບຄອງປະເທດຕ່າງໆ ແຜ່ນດິນເອຢິບກໍຈະບໍ່ມີໃຜຊ່ວຍໄດ້.[43]ພະອົງຈະຄອບຄອງຊັບສົມບັດທີ່ເປັນຄຳແລະເງິນ,
ແລະສິ່ງມີຄ່າທັງຫລາຍຂອງເອຢິບ, ຄົນລີເບຍ, ແລະຄົນເອທີໂອເປຍກໍຈະຕາມພະອົງດ້ວຍ.
[44]ແຕ່ຂ່າວຈາກທິດຕາເວັນອອກແລະທິດເຫນືອຈະເຮັດໃຫ້ພະອົງຕົກໃຈ, ແລະພະອົງຈະຊົງຍົກອອກໄປດ້ວຍຄວາມຄຽດແຄ້ນຢ່າງຍິ່ງ
ຫວັງຈະທຳລາຍແລະລ້າງຜານຄົນເປັນຈຳນວນຫລາຍຢ່າງສິ້ນຊາກ.
[45]ພະອົງຈະຊົງກາງເຕັນຫລວງລະຫວ່າງທະເລແລະພູເຂົາບໍລິສຸດຮຸ້ງໂຣດແລ້ວກໍຈະຕາຍໄປໂດຍບໍ່ມີໃຜຊ່ວຍພະອົງເລີຍ.

 generated on Tue Jun 17 19:01:42 2025

12 1ໃນຄັ້ງນັ້ນ ມີຄາເອນ ເຈົ້າຜູ້ຄອບຄອງທີ່ຍິ່ງໃຫຍ່ ຜູ້ຄຸ້ມກັນປະຊາຊົນຂອງທ່ານຈະລຸກຂຶ້ນ
ຈະເກີດຄວາມຍາກລຳບາກຢ່າງທີ່ບໍ່ເຄີຍມີມາກ່ອນຕັ້ງແຕ່ຄັ້ງເລີ່ມຕົ້ນຂອງປະຊາຊາດຕ່າງໆ ຈົນເຖິງສະໄຫມນັ້ນ ໃນຄັ້ງນັ້ນປະຊາຊົນ,
ຂອງທ່ານທຸກຄົນຜູ້ຊຶ່ງມີຊື່ບັນທຶກໄວ້ໃນຫນັງສືຈະລອດຊີວິດ.
2ຄົນເປັນຈຳນວນຫລາຍໃນພວກຄົນເຫລົ່ານັ້ນທີ່ຕາຍໄປແລ້ວໃນຜົງຝຸ່ນແຫ່ງແຜ່ນດິນໂລກຈະຕື່ນຂຶ້ນ, ບາງຄົນກໍຈະເຂົ້າສູ່ຊີວິດນິລັນ
ແລະບາງຄົນກໍເຂົ້າສູ່ຄວາມອັບອາຍແລະການດູຫມິ່ນຊົ່ວນິລັນ.

3ບັນດາຄົນເຫລົ່ານັ້ນທີ່ສະຫລາດຈະສ່ອງສະຫວ່າງສະໄຫວໃນທ້ອງຟ້າເບື້ອງເທິງແລະບັນດາຄົນເຫລົ່ານັ້ນທີ່ໄດ້ນຳຄົນຫລວງຫລາຍມາສູ່ຄວາມຊອບທຳ
ຈະເຫມືອນກັບດວງດາວທັງຫລາຍຕະຫລອດໄປແລະເປັນນິດນິລັນ.4ແຕ່ຕົວເຈົ້າ, ດານີເອນເອີຍ, ຈົ່ງປິດຖ້ອຍຄຳເຫລົ່ານີ້ໄວ້ເປັນຄວາມຫລັບ
ແລະປິດຫນັງສືນັ້ນເສຍຈົນເຖິງວາລະສຸດທ້າຍ ຄົນເປັນຈຳນວນຫລວງຫລາຍຈະແລ່ນໄປແລ່ນມາແລະ ຄວາມຮູ້ຈະທະວີຂຶ້ນ.”
5ແລ້ວຂ້າພະເຈົ້າ, ດານີເອນ, ກໍໄດ້ເບິ່ງເຫັນ ແລະມີອີກສອງຄົນຢືນຢູ່ ຄົນຫນຶ່ງໄດ້ຢືນຢູ່ທີ່ຝັ່ງແມ່ນ້ຳຂ້າງນີ້
ອີກຄົນຫນຶ່ງໄດ້ຢືນຢູ່ທີ່ຝັ່ງແມ່ນ້ຳຂ້າງນັ້ນ.6ຄົນຫນຶ່ງໃນພວກເຂົາກໍໄດ້ເວົ້າກັບຜູ້ຊາຍທີ່ສວມເສື້ອຜ້າປ່ານ ຜູ້ຊຶ່ງຢືນຢູ່ເຫນືອນ້ຳຂຶ້ນໄປນັ້ນວ່າ,
"ຍັງອີກດົນປານໃດກວ່າເຫດການຊຶ່ງເຮັດໃຫ້ປະຫລາດໃຈເຫລົ່ານີ້ຈະສິ້ນສຸດລົງ?“
7ຂ້າພະເຈົ້າໄດ້ຍິນຜູ້ຊາຍທີ່ໄດ້ສວມເສື້ອຜ້າປ່ານ ຜູ້ຊຶ່ງໄດ້ຢືນຢູ່ເຫນືອແມ່ນ້ຳນັ້ນ ເຂົາໄດ້ຍົກມືຂວາແລະມືຊ້າຍຂອງເຂົາສູ່ທ້ອງຟ້າ
ແລະໄດ້ປະຕິຍານໂດຍໄດ້ອ້າງພຣະຜູ້ຊຶ່ງມີຊີວິດຢູ່ເປັນນິດວ່າຍັງອີກວາລະຫນຶ່ງ ຫລາຍວາລະ ແລະເຄິ່ງວາລະ
ເມື່ອອຳນາດຂອງປະຊາຊົນບໍລິສຸດໄດ້ຖືກທຳລາຍໃນທີ່ສຸດ ສິ່ງທັງຫມົດນີ້ກໍຈະຈົບສິ້ນໄປດ້ວຍ.
8ຂ້າພະເຈົ້າ, ໄດ້ຍິນແຕ່ຂ້າພະເຈົ້າບໍ່ເຂົ້າໃຈ. ດັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ຖາມວ່າ, “ເຈົ້ານາຍຂອງຂ້ານ້ອຍ,
ແມ່ນຫຍັງຄືສິ່ງທີ່ຈະເປັນຜົນຂອງສິ່ງເຫລົ່ານີ້?”9ເຂົາໄດ້ເວົ້າວ່າ, “ດານີເອນເອີຍ, ໄປຕາມທາງຂອງເຈົ້າເຖາະ,
ເພາະວ່າຖ້ອຍຄຳເຫລົ່ານັ້ນກໍຖືກປິດໄວ້ແລ້ວແລະຖືກປະທັບຕາໄວ້ຈົນເຖິງວາລະສຸດທ້າຍ.
10ຄົນເປັນຈຳນວນຫລາຍຈະຖືກຊຳລະໃຫ້ບໍລິສຸດສະອາດແລະເຮັດໃຫ້ດີຂຶ້ນ ແຕ່ຄົນຊົ່ວຈະຍັງເຮັດການຊົ່ວຢູ່ ບໍ່ມີຄົນຊົ່ວຈັກຄົນຫນຶ່ງຈະເຂົ້າໃຈ
ແຕ່ບັນດາຄົນເຫລົ່ານັ້ນທີ່ສະຫລາດຈະເຂົ້າໃຈ.11ຕັ້ງແຕ່ເວລາທີ່ເຄື່ອງເຜົາບູຊາຕາມປົກກະຕິນັ້ນໄດ້ຖືກຍົກເລີກໄປ
ແລະສິ່ງທີ່ຫນ້າລັງກຽດທີ່ເປັນສາເຫດເຮັດໃຫ້ເກີດການວ່າງເປົ່າຢ່າງສິ້ນເຊີງນັ້ນຈະຖືກຕັ້ງຂຶ້ນ ຈະເປັນເວລາ1,290 ມື້.
12ຄວາມສຸກຈະມີແກ່ຜູ້ລໍຖ້າຢູ່ໄດ້ຈົນເຖິງມື້ສິ້ນສຸດຂອງ1,335 ມື້.13ເຈົ້າຕ້ອງດຳເນີນໄປຕາມທາງຂອງເຈົ້າຈົນເຖິງທີ່ສິ້ນສຸດ
ແລະເຈົ້າຈະໄດ້ພັກສະງົບ ເຈົ້າຈະຢືນຂຶ້ນໃນສະຖານທີ່ໄດ້ຖືກກຳຫນົດໃຫ້ເຈົ້າ ເມື່ອສິ້ນສຸດວັນທັງຫລາຍນັ້ນ.”

# ໂຮເສຢາ

1 1ນີ້ເປັນພຣະຄຳຂອງພຣະຢາເວໄດ້ມາເຖິງໂຮເສຢາ ລູກຊາຍຂອງເບເອຣີ ໃນສະໄຫມຂອງອຸດຊີຢາ ໂຢທາມ, ອາຮາດ, ແລະ ເຮເຊກີຢາ,
ກະສັດທັງຫລາຍຂອງຢູດາ, ແລະ ໃນສະໄຫມຂອງເຢໂຣໂບອາມລູກຊາຍຂອງໂຢອາດກະສັດແຫ່ງອິດສະຣາເອນ.
2ເມື່ອພຣະຢາເວຊົງກ່າວຜ່ານທາງໂຮເສຢາເປັນທຳອິດ, ພຣະອົງຊົງກ່າວກັບເພິ່ນວ່າ, “ຈົ່ງໄປ, ຮັບເອົາຍິງໂສເພນີມາເປັນເມຍຂອງເຈົ້າ.
ນາງມີລູກຊຶ່ງເປັນລູກໂສເພນີ. ເພາະວ່າແຜ່ນດິນໄດ້ຫລິ້ນຊູ້ຢ່າງໃຫຍ່ຫລວງດ້ວຍການປະຖິ້ມພຣະຢາເວ.”

3ດ້ວຍເຫດນີ້ ໂຮເສຢາຈຶ່ງໄປ ແລະ ແຕ່ງງານກັບນາງໂກເມ ລູກສາວຂອງດິບລາຢິມ, ແລ້ວນາງໄດ້ຖືພາ ແລະ ເກີດລູກຊາຍຄົນຫນຶ່ງໃຫ້ເພິ່ນ.
4ພຣະຢາເວຊົງກ່າວຕໍ່ໂຮເສຢາວ່າ, “ຈົ່ງຕັ້ງຊື່ໃຫ້ເຂົາວ່າ ຢິດເຣເອນ. ເພາະວ່າຍັງອີກບໍ່ເຫິງ ເຮົາຈະລົງໂທດເຊື້ອສາຍຂອງເຢຮູ
ສຳລັບເລືອງເລືອດໄຫລນອງທີ່ຢິດເຣເອນ, ແລະເຮົາຈະເຮັດໃຫ້ຣາຊະອານາຈັກຂອງເຊື້ອສາຍອິດສະຣາເອນສິ້ນສຸດລົງ.
5ມັນຈະເກີດຂຶ້ນໃນວັນທີ່ເຮົາຫັກທະນູຂອງອິດສະຣາເອນໃນຮ່ອມພູຢິດເຣເອນ.”
6ນາງໂກເມໄດ້ຖືພາອີກ ແລະ ໄດ້ອອກລູກມາເປັນຍິງ. ດັ່ງນັ້ນ ພຣະຢາເວຊົງກ່າວຕໍ່ໂຮເສຢາວ່າ, “ຈົ່ງຕັ້ງຊື່ໃຫ້ເຂົາວ່າ ໂລຣຸຮາມາ,
ເພາະວ່າເຮົາຈະບໍ່ສົງສານຕໍ່ເຊື້ອສາຍຂອງອິດສະຣາເອນອີກຕໍ່ໄປ, ເຮົາຄວນໃຫ້ອະໄພພວກເຂົາທັງຫລາຍ.
7ແຕ່ເຮົາຈະສົງສານເຊື້ອສາຍຂອງຢູດາ, ແລະເຮົາຈະເປັນຜູ້ຊ່ວຍພວກເຂົາໃຫ້ພົ້ນດ້ວຍເຮົາເອງ, ເຮົາຄືພຣະຢາເວພຣະເຈົ້າຂອງພວກເຂົາ.
ເຮົາຈະບໍ່ຊ່ວຍເຂົາໃຫ້ພົ້ນດ້ວຍຄັນທະນູ, ດ້ວຍຄົມດາບ, ດ້ວຍການຕໍ່ສູ້, ດ້ວຍມ້າ, ຫລືເຫລົ່າທະຫານມ້າ."
8ຫລັງຈາກນາງໂກເມໄດ້ໃຫ້ນາງໂລຣຸຮາມາເຊົານົມແລ້ວ, ນາງໄດ້ຖືພາ ແລະ ໄດ້ເກີດລູກຊາຍອີກຜູ້ຫນຶ່ງ.9ແລ້ວພຣະຢາເວຊົງກ່າວວ່າ,
“ໃຫ້ເອີ້ນລາວວ່າ ໂລອຳມີ, ເພາະພວກເຈົ້າທັງຫລາຍບໍ່ແມ່ນໄພ່ພົນຂອງເຮົາ, ແລະເຮົາກໍບໍ່ແມ່ນພຣະເຈົ້າຂອງພວກເຈົ້າ.
10ເຖິງປານນັ້ນ ຈຳນວນປະຊາກອນຂອງຊົນຊາດອິດສະຣາເອນ ຈະມີຫລາຍເຫມືອນເມັດຊາຍຢູ່ແຄມທະເລ, ຊຶ່ງບໍ່ສາມາດຕວງ ຫລືນັບໄດ້.
ມັນຈະເປັນຢ່າງທີ່ຊົງກ່າວແກ່ພວກເຂົາວ່າ, 'ພວກເຈົ້າບໍ່ແມ່ນໄພ່ພົນຂອງເຮົາ,' ກໍຈະກ່າວກັບພວກເຂົາວ່າ,
'ພວກເຈົ້າເປັນໄພ່ພົນຂອງພຣະເຈົ້າອົງຊົງພຣະຊົນຢູ່.'11ໄພ່ພົນຂອງຢູດາ ແລະ ໄພ່ພົນຂອງອິດສະຣາເອນຈະເຕົ້າໂຮມກັນ.
ພວກເຂົາຈະແຕ່ງຕັ້ງເອົາຜູ້ນຳສຳລັບພວກເຂົາ, ແລະ ພວກເຂົາຈະຂຶ້ນມາຈາກແຜ່ນດິນ, ເພາະຈະເປັນວັນທີ່ຍິ່ງໃຫຍ່ຂອງຢິດເຣເອນ.


generated on Tue Jun 17 19:01:42 2025

2 [1]ຈົ່ງກ່າວກັບບັນດາອ້າຍນ້ອງຂອງເຈົ້າ ວ່າ, 'ໄພ່ພົນຂອງເຮົາ' ແລະ ກັບເອື້ອຍນ້ອງຂອງເຈົ້າວ່າ, 'ເຈົ້າໄດ້ຮັບຄວາມເມດຕາ.'

[2]ຈົ່ງຮ້ອງຟ້ອງແມ່ຂອງເຈົ້າ, ຈົ່ງຮ້ອງຟ້ອງເທີ້ນ, ເພາະນາງບໍ່ແມ່ນເມຍຂອງເຮົາ, ແລະ ເຮົາບໍ່ໄດ້ເປັນຜົວຂອງນາງ.
ຈົ່ງຂໍໃຫ້ນາງປະຖິ້ມການເປັນໂສເພນີຈາກຫນ້າຂອງນາງເສຍ, ແລະ ການກະທຳທີ່ເປັນການຫລິ້ນຊູ້ຂອງນາງຈາກຫນ້າເອິກຂອງນາງ.
[3]ບໍ່ເຊັ່ນນັ້ນ, ເຮົາຈະເປືອຍກາຍນາງໃຫ້ເຫມືອນກັບມື້ນາງເກີດມາ. ເຮົາຈະເຮັດໃຫ້ນາງເປັນເຫມືອນຖິ່ນແຫ້ງແລ້ງກັນດານ,
ເຫມືອນກັບດິນທີ່ແຫ້ງແລ້ງ, ແລະ ເຮົາຈະເຮັດໃຫ້ນາງຕາຍເພາະການຫິວນ້ຳ.
[4]ເຮົາຈະບໍ່ອີດູຕົນຕໍ່ລູກຫລານຂອງນາງ, ເພາະພວກເຂົາເປັນລູກຂອງໂສເພນີ.[5]ເພາະແມ່ຂອງພວກເຂົາເປັນໂສເພນີ, ແລະ
ນາງຖືພາພວກເຂົາຈາກການກະທຳຫນ້າອັບອາຍ. ນາງເວົ້າວ່າ, "ຂ້ອຍຈະຕາມຫາບັນດາຄົນຮັກຂອງຂ້ອຍ, ເພາະວ່າ ພວກເຂົາໄດ້ເອົາອາຫານ
ແລະ ນ້ຳດື່ມໃຫ້ແກ່ຂ້ອຍ, ເຄື່ອງຂົນແກະ ແລະຜ້າໄຫມໃຫ້ແກ່ຂ້ອຍ, ນ້ຳມັນ ແລະ ເຄື່ອງດື່ມໃຫ້ແກ່ຂ້ອຍ."
[6]ດ້ວຍເຫດນັ້ນ ເຮົາຈະສ້າງສິ່ງທີ່ກີດຂວາງເພື່ອປິດກັ້ນທາງຂອງນາງດ້ວຍຫນາມ. ເຮົາຈະສ້າງກຳແພງກັ້ນນາງໄວ້ ດັ່ງນັ້ນ
ນາງບໍ່ສາມາດພົບທາງຂອງນາງ.[7]ນາງຈະແລ່ນຕາມຫາພວກຄົນຮັກຂອງນາງ, ແຕ່ນາງຈະບໍ່ພົບພວກເຂົາ. ນາງຈະຊອກຫາພວກເຂົາ,
ແຕ່ນາງຈະບໍ່ພົບພວກເຂົາ. ແລ້ວນາງຈະເວົ້າວ່າ, "ຂ້ອຍຈະກັບຄືນໄປຫາຜົວຄົນທຳອິດຂອງຂ້ອຍ,
ເພາະວ່າມັນດີກວ່າສຳລັບຂ້ອຍຫລາຍກວ່າຕອນນີ້."
[8]ເພາະນາງບໍ່ຮູ້ເລີຍວ່າເຮົາເອງເປັນຜູ້ເອົາເຂົ້າ, ເຫລົ້າອະງຸ່ນ ແລະນ້ຳມັນ, ແລະ ເຮົາເປັນຜູ້ໄດ້ໃຫ້ເງິນ ແລະ ຄຳຢ່າງເຫລືອເຟືອ,
ຊຶ່ງພວກເຂົາໄດ້ເອົາໄປໃຊ້ສຳລັບພະບາອານເສຍ.[9]ເພາະສະນັ້ນ ເຮົາຈະຍຶດເຂົ້າ ຂອງນາງຄືນໃນລະດູເກັບກ່ຽວ, ແລະ
ເຫລົ້າອະງຸ່ນໃຫມ່ໃນລະດູຂອງມັນ. ເຮົາຈະເອົາຂົນແກະ ແລະ ຜ້າໄຫມທີ່ເຮົາໃຫ້ປົກປິດຮ່າງກາຍທີ່ເປືອຍຂອງນາງ.
[10]ແລ້ວເຮົາຈະເປືອຍກາຍນາງຕໍ່ຫນ້າພວກຄົນຮັກຂອງນາງ, ແລະ ຈະບໍ່ມີໃຜຊ່ອຍນາງໃຫ້ພົ້ນຈາກມືຂອງເຮົາໄດ້.
[11]ເຮົາຈະເຮັດໃຫ້ງານກິນລ້ຽງທັງຫລາຍຂອງນາງສິ້ນສຸດລົງ—ງານເທດສະການສະຫລອງຂອງນາງ, ການສະຫລອງມື້ຂຶ້ນຫນຶ່ງຄ່ຳ,
ວັນສະບາໂຕຂອງນາງ, ແລະງານສະຫລອງທັງປວງທີ່ກຳຫນົດໄວ້ຂອງນາງ.
[12]"ເຮົາຈະທຳລາຍຕົ້ນອະງຸ່ນຂອງນາງ ແລະຕົ້ນຫມາກເດື່ອເທດຂອງນາງ, ຊຶ່ງນາງໄດ້ເວົ້າວ່າ,
'ນີ້ເປັນຄ່າຈ້າງຂອງຂ້ອຍທີ່ພວກຄົນຮັກໄດ້ໃຫ້ຂ້ອຍໄວ້.' ເຮົາຈະເຮັດໃຫ້ພວກມັນເປັນປ່າ ແລະສັດທັງຫລາຍໃນທົ່ງນາກໍຈະມາກິນມັນເສຍ.
[13]ເຮົາຈະລົງໂທດນາງສຳລັບວັນເທດສະການພະບາອານ, ເມື່ອນາງເຜົາເຄື່ອງຫອມໃຫ້ພວກເຂົາ, ເມື່ອນາງປະດັບໂຕແຫວນ ແລະ ເພັດພອຍ,
ແລະນາງໄປຊອກຫາພວກຄົນຮັກຂອງນາງ ແລະ ລືມເຮົາ—ນີ້ຄືຄຳປະກາດຂອງພຣະຢາເວ.
[14]ດ້ວຍເຫດນັ້ນ ເຮົາຈະອອຍນາງໃຫ້ກັບມາ. ເຮົາຈະນຳນາງເຂົ້າໄປຍັງຖິ່ນແຫ້ງແລ້ງກັນດານ ແລະ ເວົ້າກັບນາງຢ່າງອ່ອນຫວານ.
[15]ເຮົາຈະຄືນສວນອະງຸ່ນໃຫ້ແກ່ນາງອີກ, ແລະ ໃຫ້ຮ່ອມພູຍາກແຫ່ງອາໂຄເປັນປະຕູແຫ່ງຄວາມຫວັງ.
ນາງຈະຕອບເຮົາຢູ່ທີ່ນັ້ນເຫມືອນຄາວທີ່ຍັງເປັນສາວ, ຄືເມື່ອຄາວທີ່ນາງອອກຈາກແຜ່ນດິນເອຢິບນັ້ນ.
[16]"ມັນຈະເປັນວັນນັ້ນ—ນີ້ເປັນການປະກາດຂອງພຣະຢາເວ—ທີ່ເຈົ້າຈະເອີ້ນເຮົາວ່າ, 'ຜົວຂອງຂ້ອຍ,' ແລະ ເຈົ້າຈະບໍ່ເອີ້ນວ່າ,
'ພະບາອານຂອງຂ້ອຍ' ອີກຕໍ່ໄປ.[17]ເພາະເຮົາຈະເອົາຊື່ຂອງພວກພະບາອານອອກຈາກປາກຂອງນາງ;
ຊື່ຂອງພວກມັນຈະບໍ່ມີການຈົດຈຳອີກຕໍ່ໄປ."
[18]"ໃນວັນນັ້ນເຮົາຈະເຮັດສັນຍາສຳລັບພວກສັດທັງຫລາຍໃນທົ່ງນາ, ດ້ວຍຝູງນົກທັງປວງໃນທ້ອງຟ້າ, ແລະສັດເລືອຄານທັງຫລາຍເທິງແຜ່ນດິນ.
ເຮົາຈະທຳລາຍຄັນທະນູ, ດາບ ແລະ ແລະເສິກສົງຄາມຈາກແຜ່ນດິນ, ແລະເຮົາຈະເຮັດໃຫ້ເຈົ້ານອນລົງຢ່າງປອດໄພ.
[19]ເຮົາສັນຍາວ່າຈະເປັນຜົວຂອງເຈົ້າຕະຫລອດໄປເປັນນິດ. ເຮົາສັນຍາວ່າຈະເປັນຜົວຂອງເຈົ້າໃນຄວາມຊອບທຳ, ຄວາມຍຸດຕິທຳ,
ພຣະສັນຍາທີ່ສັດຊື່, ແລະ ເມດຕາ.[20]ເຮົາຈະຮັກສາຄຳຫມັ້ນສັນຍາຂອງເຮົາໄວ້ໃນຄວາມສັດຊື່ ແລະ ເຈົ້າຈະຮູ້ຈັກພຣະຢາເວ.
[21]ໃນເວລານັ້ນ, ເຮົາຈະຕອບ—ນີ້ຄືຄຳປະກາດຂອງພຣະຢາເວ—ເຮົາຈະຕອບຟ້າສະຫວັນທັງຫລາຍ, ແລະພວກເຂົາຈະຕອບແຜ່ນດິນໂລກ.
[22]ແຜ່ນດິນໂລກຈະຕອບເມັດພືດ, ເຫລົ້າອະງຸ່ນໃຫມ່ ແລະ ນ້ຳມັນຫມາກກອກເທດ, ແລະສິ່ງເຫລົ່ານັ້ນຈະຕອບຢິດເຣເອນ.
[23]ເຮົາຈະປູກນາງສຳລັບເຮົາໃນແຜ່ນດິນ, ແລະເຮົາຈະມີຄວາມເມດຕາຕໍ່ໂລຣູຮາມາ. ເຮົາຈະເວົ້າຕໍ່ໂລອັບມີວ່າ, 'ເຈົ້າເປັນອາມີອັດທາ,'
ແລະພວກເຂົາຈະກ່າວກັບເຮົາວ່າ, 'ພຣະອົງເປັນພຣະເຈົ້າຂອງຂ້ານ້ອຍ.'"

 generated on Tue Jun 17 19:01:42 2025

3 [1]ພຣະຢາເວຊົງກ່າວຕໍ່ຂ້ານ້ອຍອີກວ່າ, “ຈົ່ງໄປອີກຄັ້ງ, ຮັກຜູ້ຍິງຄົນຫນຶ່ງຊຶ່ງຜົວຮັກນາງ, ແຕ່ນາງເປັນຄົນຫລິ້ນຊູ້.
ຈົ່ງຮັກນາງເຫມືອນຢ່າງເຮົາ, ພຣະຢາເວຮັກປະຊາຊົນອິດສະຣາເອນ, ເພາະເຖິງແມ່ນວ່າພວກເຂົາກັບຄືນໄປຫາພະອື່ນ ແລະ
ມັກຂະຫນົມຫມາກອະງຸ່ນແຫ້ງ.”[2]ດັ່ງນັ້ນ ເຮົາຈຶ່ງຊື້ນາງດ້ວຍເງິນສິບຫ້າຫລຽນ ແລະ ເຂົ້າເດືອຍສິບຫ້າຫມື່ນຊີເອົານາງມາ.
[3]ຂ້ານ້ອຍໄດ້ບອກນາງວ່າ, "ເຈົ້າຕ້ອງຢູ່ກັບເຮົາຫລາຍມື້. ເຈົ້າຈະຕ້ອງບໍ່ເປັນໂສເພນີ ຫລື ໄປເປັນຂອງຊາຍອື່ນ. ແບບດຽວກັນນີ້,
ເຮົາຈະຢູ່ກັບເຈົ້າ."

[4]ເພາະວ່າຄົນອິດສະຣາເອນຈະຢູ່ຢ່າງດົນນານໂດຍບໍ່ມີກະສັດ, ບໍ່ມີເຈົ້າຊາຍ, ບໍ່ມີການຖວາຍເຄື່ອງບູຊາ, ບໍ່ມີເສົາສັກສິດ, ບໍ່ມີເອໂຟດ ຫລື
ທໍາໂຮງຮູບເຄົາລົບທັງຫລາຍ.[5]ຫລັງຈາກນັ້ນ ປະຊາຊົນອິດສະຣາເອນຈະກັບຄືນໄປຫາພຣະຢາເວພຣະເຈົ້າ ຂອງພວກເຂົາອີກ
ແລະດາວິດກະສັດຂອງພວກເຂົາ, ແລະໃນວັນສຸດທ້າຍ, ພວກເຂົາຈະກັບຄືນມາຢໍາເກງພຣະຢາເວ ແລະຄວາມດີຂອງພຣະອົງ.

 generated on Tue Jun 17 19:01:42 2025

4 [1]ຈົ່ງຟັງພຣະຄຳຂອງພຣະຢາເວ, ພວກເຈົ້າຜູ້ເປັນຊົນຊາດອິດສະຣາເອນທັງຫລາຍ. ພຣະຢາເວໄດ້ກ່າວວ່າ
ເຮົາຈະດຳເນີນຄະດີຕໍ່ສູ້ຜູ້ທີ່ອາໄສຢູ່ໃນແຜ່ນດິນວ່າ, ເພາະບໍ່ມີຄວາມຈິງ ຫລື ຄວາມຊື່ສັດໃນພຣະສັນຍາ,
ບໍ່ມີຄວາມຮູ້ເລື່ອງພຣະເຈົ້າໃນແຜ່ນດິນ.[2]ໃນທີ່ນັ້ນຈະມີການຊາບແຊ່ງ, ການຂີ້ຕົວະ, ການຂ້າຟັນ, ການຂີ້ລັກ ແລະ ການຫລິ້ນຊູ້.
ປະຊາຊົນໄດ້ທຳລາຍພັນທະສັນຍາທັງຫມົດ, ແລະ ໄດ້ມີການຫລັ່ງເລືອດຊໍ້າແລ້ວຊໍ້າອີກ.

[3]ດັ່ງນັ້ນ ແຜ່ນດິນນີ້ຈຶ່ງແຫ້ງແລ້ງ, ແລະ ທຸກສິ່ງທີ່ມີຊີວິດຢູ່ຈະສູນເສຍໄປ; ສັດເດຍລະສານທັງຫລາຍໃນທົ່ງນາ ແລະ ຝູງນົກທັງປວງໃນທ້ອງຟ້າ,
ແມ່ນແຕ່ປາໃນທະເລ, ກໍຈະຖືກເອົາໄປເສຍ.
[4]ແຕ່ຢ່າໃຫ້ໃຜຟ້ອງຮ້ອງຄະດີຄວາມໃດໆ; ຫລືຢ່າໃຫ້ຜູ້ຫນຶ່ງຜູ້ໃດກ່າວໂທດໃສ່ຄົນອື່ນ. ເພາະວ່າພວກເຈົ້າ, ຄືປະໂລຫິດທັງຫລາຍ,
ຄືຜູ້ທີ່ເຮົາກຳລັງກ່າວໂທດຢູ່.[5]ພວກເຈົ້າປະໂລຫິດທັງຫລາຍຈະສະດຸດໃນກາງເວັນ;
ພວກຜູ້ປະກາດພຣະຄຳທັງຫລາຍກໍຈະສະດຸດກັບພວກເຈົ້າໃນກາງຄືນ, ແລະ ເຮົາຈະທຳລາຍແມ່ຂອງພວກເຈົ້າ.
[6]ໄພ່ພົນຂອງເຮົາກໍຖືກທຳລາຍ ເພາະພວກເຂົາຂາດຄວາມຮູ້. ເພາະວ່າ ພວກເຈົ້າຜູ້ເປັນປະໂລຫິດກໍປະຕິເສດຄວາມຮູ້,
ເຮົາຈະປະຕິເສດພວກເຈົ້າເຫມືອນພວກປະໂລຫິດໄດ້ປະຕິເສດເຮົາ. ເພາະວ່າພວກເຈົ້າໄດ້ປະຖິ້ມຄຳສອນຂອງເຮົາ, ເຖິງວ່າ
ເຮົາເປັນພຣະເຈົ້າຂອງພວກເຈົ້າ, ແລະເຮົາກໍຈະລືມບັນດາລູກຫລານຂອງພວກເຈົ້າດ້ວຍ.[7]ຈຳນວນປະໂລຫິດຫລາຍຂຶ້ນເທົ່າໃດ
ການເຮັດບາບຕໍ່ສູ້ເຮົາກໍຈະຫລາຍຂຶ້ນເທົ່ານັ້ນ. ພວກເຂົາທັງຫລາຍໄດ້ແລກປ່ຽນກຽດສັກສີຂອງພວກເຂົາເພື່ອຄວາມອັບອາຍ.
[8]ພວກເຂົາລ້ຽງຊີບດ້ວຍຄວາມບາບຂອງປະຊາຊົນຂອງເຮົາ; ພວກເຂົາໂລບມາກໂລພາເພາະຄວາມຊົ່ວຮ້າຍຂອງພວກເຂົາທີ່ເພີ່ມຫລາຍຂຶ້ນ.
[9]ພວກປະຊາຊົນກໍເຫມືອນກັບພວກປະໂລຫິດ: ເຮົາຈະລົງຮັບໂທດພວກເຂົາທັງຫມົດເພາະການກະທຳຂອງພວກເຂົາ;
ເຮົາຈະລົງໂທດພວກເຂົາເພາະການກະທຳຂອງພວກເຂົາ.
[10]ພວກເຂົາຈະກິນແຕ່ກໍຈະບໍ່ອີ່ມ; ພວກເຂົາຈະເປັນໂສເພນີແຕ່ບໍ່ມີລູກເພີ່ມຂຶ້ນ, ເພາະພວກເຂົາໄດ້ອອກໄປຫ່າງຈາກພຣະຢາເວ.
[11]ພວກເຂົາມັກການມີເພດສຳພັນແບບເປີເປື້ອນ, ມັກເຫລົ້າອະງຸ່ນ ແລະ ເຫລົ້າອະງຸ່ນໃຫມ່, ຊຶ່ງໄດ້ນຳເອົາຄວາມເຂົ້າໃຈໄປຈາກພວກເຂົາ.
[12]ປະຊາຊົນຂອງເຮົາຈະຫັນໄປປຶກສາບັນດາຮູບເຄົາລົບທີ່ເຮັດດ້ວຍໄມ້, ແລະ ໄມ້ຄ້ອນເທົ້າຂອງພວກເຂົາທີ່ໃຫ້ຄຳທຳນວາຍແກ່ພວກເຂົາ.
ເພາະຈິດໃຈເປີເປື້ອນຂອງພວກເຂົາໄດ້ຊັກຈູງພວກເຂົາໄປໃນທາງຜິດ, ແລະ
ພວກເຂົາເຮັດຄືໂສເພນີແທນທີ່ຈະສັດຊື່ຕໍ່ພຣະເຈົ້າຂອງພວກເຂົາທັງຫລາຍ.
[13]ພວກເຂົາຖວາຍເຄື່ອງບູຊາຢູ່ເທິງຍອດພູ ແລະ ໄດ້ເຜົາເຄື່ອງຫອມບູຊາຢູ່ເທິງເນີນພູນ້ອຍ, ຢູ່ກ້ອງຕົ້ນໂອກ, ຕົ້ນປໍປຣາ ແລະ ຕົ້ນກໍຫລວງ,
ເພາະມີຮົ່ມເຢັນດີ. ດ້ວຍເຫດນີ້ແຫລະ ພວກລູກສາວຂອງເຈົ້າຈຶ່ງຜິດສິນທຳທາງເພດ ແລະພວກລູກໄພ້ຂອງພວກເຈົ້າກໍຫລິ້ນຊູ້.
[14]ເຮົາຈະຍັງບໍ່ລົງໂທດລູກຂອງພວກເຂົາຍ້ອນການຜິດສິນທຳທາງເພດ ຫລື ລູກໄພ້ຂອງພວກເຈົ້າເມື່ອພວກເຂົາຫລິ້ນຊູ້.
ເພາະວ່າພວກຜູ້ຊາຍທັງຫລາຍກໍເຮັດຄືໂສເພນີ, ແລະ ພວກເຂົາເຜົາເຄື່ອງຖວາຍບູຊາ ດັ່ງນັ້ນ ສາມາດເຮັດຜິດສິນລະທຳກັບໂສເພນີ
ທີ່ປະຈຳຢູ່ຕາມພຣະວິຫານຕ່າງໆໄດ້. ສະນັ້ນ ຄົນພວກນີ້ຜູ້ທີ່ບໍ່ໄດ້ເຂົ້າໃຈ ຈະບໍ່ເຖິງຄວາມຈິບຫາຍ.
[15]ເຖິງແມ່ນວ່າພວກເຈົ້າ, ອິດສະຣາເອນ, ໄດ້ຫລິ້ນຊູ້, ຂໍຢ່າໃຫ້ຢູດາມີຄວາມຜິດ. ຂໍຢ່າໄປໃນເມືອງກິນການ, ໄພ່ພົນທັງຫລາຍ;
ຢ່າຂຶ້ນໄປທີ່ເບັດອາເວນ, ແລະ ຢ່າກ່າວຄຳສາບານວ່າ, "ຫາກພຣະຢາເວຊົງພຣະຊົນຢູ່ແນ່ແທ້ສັນໃດ."[16]ເພາະຄົນອິດສະຣາເອນນັ້ນດື້ດ້ານ,
ເຫມືອນງົວສາວທີ່ດື້. ພຣະຢາເວຈະນຳພວກເຂົາໃນທົ່ງຫຍ້າເຫມືອນລ້ຽງແກະໄດ້ຢ່າງໃດ?
[17]ເອຟຣາອິມຮວບຮວມໂຕເຂົ້າກັບບັນດາຮູບເຄົາລົບ; ຈົ່ງປະພວກເຂົາໃຫ້ຢູ່ຄົນດຽວ.[18]ຫລັງຈາກທີ່ພວກເຂົາສ່າງເມົາ,
ພວກເຂົາຈະສືບຕໍ່ໃນການຫລິ້ນຊູ້ຕໍ່ໄປ; ຜູ້ນຳຂອງພວກເຂົາທັງຫລາຍມັກຄວາມອັບອາຍຂອງພວກເຂົາ.
[19]ລົມຈະຫໍ່ຫຸ້ມພວກເຂົາໄວ້ໃນປີກຂອງມັນ; ແລະພວກເຂົາທັງຫລາຍຈະອັບອາຍ ຍ້ອນການຖວາຍເຄື່ອງເຜົາບູຊາຂອງພວກເຂົາ.

 generated on Tue Jun 17 19:01:42 2025

5 [1]"ປະໂລຫິດເອີຍ, ຈົ່ງຟັງຂໍ້ນີ້! ຈົ່ງລະມັດລະວັງເດີ້, ເຊື້ອສາຍຂອງອິດສະຣາເອນເອີຍ!" ຈົ່ງຟັງ, ເຊື້ອສາຍຂອງກະສັດເອີຍ!
ເພາະການພິພາກສາກຳລັງມາເຖິງພວກເຈົ້າທຸກຄົນ. ພວກເຈົ້າເປັນເຫມືອນແຮ້ວທີ່ເມືອງມິດຊະປາ ແລະ
ເປັນເຫມືອນຕະຂ່າຍກາງຢູ່ເທິງເມືອງຕາໂບ.[2]ພວກກະບົດກໍຈົດຈໍ່ຢູ່ກັບການສັງຫານຫມູ່, ແຕ່ເຮົາຈະລົງໂທດພວກເຈົ້າທັງຫມົດ.

[3]ເຮົາຮູ້ຈັກເອຟາຣາອິມ, ແລະອິດສະຣາເອນກໍຈະບໍ່ລີ້ຈາກເຮົາ. ເອຟາຣາອິມ, ຕອນນີ້ເຈົ້າທັງຫລາຍກໍກາຍເປັນໂສເພນີເສຍແລ້ວ;
ອິດສະຣາເອນກໍເປັນມົນທິນ.[4]ການກະທຳຂອງພວກເຂົາບໍ່ຍອມໃຫ້ພວກເຂົາກັບຄືນໄປຫາພຣະເຈົ້າ,
ເພາະພວກເຂົາມີໃຈແຫ່ງການຫລິ້ນຊູ້ຢູ່ໃນໂຕພວກເຂົາ, ແລະພວກເຂົາບໍ່ຮູ້ຈັກພຣະຢາເວ.
[5]ຄວາມອວດອ້າງຈອງຫອງຂອງອິດສະຣາເອນເປັນພະຍານຕໍ່ສູ້ພວກເຂົາ; ເຫດນີ້ ອິດສະຣາເອນ ແລະ
ເອຟຣາຢິມຈະສະດຸດໃນຄວາມຜິດຂອງພວກເຂົາ; ແລະ ຊາວຢູດາກໍຈະສະດຸດເຫມືອນກັນ.[6]ພວກເຂົາຈະໄປກັບຝູງແບ້ ແກະ ແລະ
ຝູງງົວຂອງເຂົາ ເພື່ອຈະສະແຫວງຫາພຣະຢາເວ, ແຕ່ພວກເຂົາຈະບໍ່ພົບພຣະອົງ, ແລະພຣະອົງຈະຊົງຫນີຈາກພວກເຂົາໄປ.
[7]ພວກເຂົາບໍ່ໄດ້ສັດຊື່ຕໍ່ພຣະຢາເວ, ເພາະພວກເຂົາໄດ້ໃຫ້ກຳເນີດລູກນອກກົດຫມາຍ. ຕອນນີ້
ເທດສະການວັນພະຈັນເຕັມດວງຈະເຜົາໄຫມ້ພວກເຂົາ ພ້ອມທົ່ງນາທັງຫລາຍຂອງເຂົາ.
[8]ຈົ່ງເປົ່າແກຢູ່ກິເບອາ, ແລະ ເປົ່າແກໃນຣາມາ. ສຽງໂຮ່ຮ້ອງຂອງການສູ້ຮົບທີ່ເບັດອາເວນ:
'ເຮົາຈະຕິດຕາມທ່ານເບັນຢາມິນ!'[9]ເອຟາຣາອິມຈະກາຍເປັນບ່ອນຮົກຮ້າງໃນວັນແຫ່ງການພິພາກສາລົງໂທດ.
ທ່າມກາງເຊື້ອຊາດຂອງອິດສະຣາເອນ. ເຮົາໄດ້ປະກາດເຖິງເຫດການທີ່ຈະເກີດຂຶ້ນ!
[10]ບັນດາຜູ້ນຳຂອງຢູດາເປັນເຫມືອນຄົນທີ່ຍ້າຍເສົາປັກເຂດແດນ.
ເຮົາຈະຖອກເທຄວາມໂກດຮ້າຍຂອງເຮົາລົງເທິງພວກເຂົາເຫມືອນຢ່າງຖອກນ້ຳ.[11]ເອຟາຣາອິມຖືກບີບ;
ພວກເຂົາຖືກບົດຢູ່ໃນການພິພາກສາລົງໂທດ, ເພາະພວກເຂົາຕັ້ງໃຈຕິດຕາມຮູບເຄົາລົບ.
[12]ດັ່ງນັ້ນ ເຮົາຈະເປັນເຫມືອນແມງໄມ້ຕໍ່ເອຟາຣາອິມ, ແລະ ຈະເປັນເຫມືອນຄວາມເນົ່າເປື່ອຍຂອງເຊື້ອສາຍຢູດາ.
[13]ເມື່ອໃດເອຟາຣາອິມເຫັນຄວາມເຈັບໄຂ້ຂອງຕົນ ແລະ ຢູດາໄດ້ເຫັນບາດແຜຂອງຕົນ ແລ້ວເອຟາຣາອິມກໍໄດ້ໄປຫາອັດຊີເຣຍ ແລະ
ຢູດາກໍສົ່ງຜູ້ສື່ສານໄປຫາກະສັດຜູ້ຍິ່ງໃຫຍ່. ແຕ່ພະອົງກໍບໍ່ສາມາດຮັກສາປະຊາຊົນ ຫລື ປິ່ນປົວບາດແຜຂອງເຂົາເຈົ້າໃຫ້ດີໄດ້.
[14]ເພາະເຫດນີ້ ເຮົາຈະເປັນເຫມືອນດັ່ງສິງໂຕຕໍ່ເອຟາຣາອິມ, ແລະ ເຫມືອນດັ່ງສິງຫນຸ່ມຕໍ່ເຊື້ອສາຍຂອງຢູດາ. ເຮົາ, ເຮົານີ້ແຫລະ,
ຈະເປັນຜູ້ຈີກເຈົ້າແລະແກ່ເຈົ້າອອກໄປ; ເຮົາຈະເອົາພວກເຂົາອອກມາ ແລະ ຈະບໍ່ມີໃຜຊ່ອຍເຫລືອພວກເຂົາໄດ້.
[15]ເຮົາຈະໄປແລະໄປຍັງສະຖານທີ່ຂອງເຮົາ ຈົນກວ່າພວກເຈົ້າຈະຍອມຮັບຄວາມຜິດບາບຂອງຕົນ ແລະ ສະແຫວງຫາພຣະພັກຂອງເຮົາ,
ຈົນກວ່າພວກເຂົາຈະສະແຫວງຫາເຮົາຢ່າງຈິງໃຈໃນຄວາມໂສກເສົ້າຂອງເຂົາ.”

 generated on Tue Jun 17 19:01:42 2025

6 [1]ມາເຖີດ, ໃຫ້ພວກເຮົາກັບຄືນໄປຫາພຣະຢາເວເທາະ. ເພາະວ່າພຣະອົງໄດ້ຊົງຈີກພວກເຮົາເປັນທ່ອນໆ,
ແຕ່ພຣະອົງຈະຊົງຮັກສາພວກເຮົາໃຫ້ດີ, ພຣະອົງຊົງເຮັດໃຫ້ພວກເຮົາບາດເຈັບ, ແຕ່ຈະຊົງພັນບາດແຜໃຫ້ພວກເຮົາ.[2]ຫລັງຈາກນັ້ນສອງມື້
ພຣະອົງຈະຊົງໃຫ້ພວກເຮົາຄ່ອຍດີຂຶ້ນ; ພຣະອົງຈະຊົງເຮັດໃຫ້ເຮົາດີຂຶ້ນໃນມື້ທີສາມ, ແລະ
ພວກເຮົາຈະພວກເຮົາກໍຈະມີຊີວິດຢູ່ຕໍ່ພຣະພັກຂອງພຣະອົງ.[3]ຂໍໃຫ້ພວກເຮົາມາຮູ້ຈັກພຣະຢາເວກັນເທາະ;
ຂໍໃຫ້ພວກເຮົາພະຍາຍາມຮູ້ຈັກພຣະອົງ. ພຣະອົງຈະສະເດັດມາຫາພວກເຮົາຢ່າງແນ່ນອນເຫມືອນຍາມເຊົ້າວັນໃຫມ່;
ພຣະອົງຈະສະເດັດມາເຫມືອນດັ່ງຫ່າຝົນ, ເຫມືອນດັ່ງຝົນປາຍລະດູທີ່ຫົດລົງເທິງແຜ່ນດິນ."

[4]ເອຟຣາອິມ, ເຮົາຈະເຮັດຢ່າງໃດກັບເຈົ້ານໍ? ຢູດາ, ເຮົາຈະເຮັດຢ່າງໃດກັບເຈົ້ານໍ? ຄວາມຮັກທີ່ພວກເຈົ້າເຫມືອນກັບຫມອກໃນຍາມເຊົ້າ,
ເຫມືອນກັບນ້ຳຄ້າງທີ່ເຫືອຍຫາຍໄປແຕ່ເຊົ້າມືດ.[5]ດັ່ງນັ້ນແຫລະ ເຮົາຈະຕັດພວກເຈົ້າເປັນທ່ອນໆໂດຍຜູ້ປະກາດພຣະຄຳ,
ເຮົາຈະຂ້າພວກເຂົາດ້ວຍພຣະຄຳທີ່ອອກມາຈາກປາກຂອງເຮົາ. ການພິພາກສາຂອງພວກເຈົ້າເປັນເຫມືອນແສງທີ່ສ່ອງອອກໄປ.
[6]ເພາະເຮົາມີຄວາມປາຖະຫນາຄວາມສັດຊື່ ແລະ ບໍ່ແມ່ນປາຖະຫນາເຄື່ອງຖວາຍບູຊາ, ແລະ
ເຮົາປາຖະຫນາໃນຄວາມຮູ້ໃນພຣະເຈົ້າຫລາຍກວ່າເຄື່ອງເຜົາຖວາຍບູຊານັ້ນ.[7]ເຫມືອນຢ່າງອາດາມທີ່ໄດ້ທຳລາຍພັນທະສັນຍາ;
ພວກເຂົາບໍ່ສັດຊື່ຕໍ່ເຮົາ.
[8]ກິເລອາດເປັນນະຄອນທີ່ເຕັມໄປດ້ວຍຄົນເຮັດຊົ່ວ ທີ່ມີຮອຍເປື້ອນເລືອດ.[9]ກຸ່ມໂຈນທີ່ຄອຍດັກຊຸ່ມຄົນສັນໃດ
ພວກປະໂລຫິດກໍເຕົ້າໂຮມກັນສັນນັ້ນ, ພວກເຂົາຂ້າຄົນໃນລະຫວ່າງທາງ ເມືອງເຊເຄັມ; ພວກເຂົາໄດ້ກໍອາຊະຍາກຳທີ່ຫນ້າອັບອາຍ.
[10]ໃນເຊື້ອສາຍຂອງອິດສະຣາເອນ ເຮົາໄດ້ເຫັນສິ່ງຊົ່ວຮ້າຍ; ການຫລິ້ນຊູ້ຂອງເອຟຣາອິມກໍຢູ່ທີ່ນັ້ນ, ແລະ ອິດສະຣາເອນກໍເປັນມົນທິນ.
[11]ສຳລັບພວກເຈົ້າຄືກັນຢູດາເອີຍ, ເວລາແຫ່ງການເກັບກ່ຽວໄດ້ຖືກກຳນົດໄວ້ແລ້ວ, ເຮົາຈະເຮັດໃຫ້ໄພ່ພົນຂອງເຮົາກັບຄືນສູ່ສະພາບດີ.

 generated on Tue Jun 17 19:01:42 2025

7 [1]ເມື່ອໃດທີ່ເຮົາຕ້ອງການຮັກສາອິດສະຣາເອນ, ຄວາມຜິດບາບຂອງເອຟາຣາອິມກໍປາກົດຂຶ້ນ,
ເຊັ່ນດຽວກັນກັບການເຮັດຄວາມຊົ່ວຂອງສະມາເລຍ, ເພາະພວກເຂົາໄດ້ລໍ້ລວງ; ຂີ້ລັກກໍເຂົ້າມາ,
ໂຈນກໍເຕົ້າໂຮມກັນເພື່ອປຸ້ນຈີ້ຕາມຖະຫນົນຫົນທາງ.[2]ພວກເຂົາບໍ່ເຄີຍຮູ້ຕົວວ່າ ເຮົາໄດ້ຈົດຈໍາການເຮັດຊົ່ວທັງປວງຂອງພວກເຂົາ. ບັດນີ້
ຄວາມບາບຂອງພວກເຂົາໄດ້ປິດລ້ອມພວກເຂົາ; ແລະໄດ້ຢູ່ຕໍ່ພຣະພັກຂອງເຮົາ.

[3]ດ້ວຍຄວາມຊົ່ວຂອງພວກເຂົາເຮັດໃຫ້ກະສັດຍິນດີ, ແລະ ການຕົວະຂອງພວກເຂົາເຮັດໃຫ້ພວກເຈົ້ານາຍພໍໃຈ.
[4]ພວກເຂົາທັງຫມົດຕ່າງເປັນຄົນຫລິ້ນຊູ້, ເປັນເຫມືອນເຕົາອົບທີ່ຫຸ້ມຄວາມຮ້ອນໄວ້,
ໂດຍທີ່ຊ່າງເຮັດເຂົ້າຫນົມບໍ່ຕ້ອງເລັ່ງໄຟຕັ້ງແຕ່ຕອນນວດແປ້ງຈົນແປ້ງຟູຂຶ້ນເອງ.[5]ໃນວັນແຫ່ງກະສັດຂອງເຮົາ
ພວກເຈົ້ານາຍກໍເຮັດໃຫ້ຕົນເອງບໍ່ສະບາຍດ້ວຍຄວາມຮ້ອນຈາກເຫລົ້າອະງຸ່ນ. ກະສັດກໍເຫັນດີນໍາ ແລະ ຮ່ວມມືກັບພວກທີ່ກໍາລັງເຍາະເຍີ້ຍ.
[6]ເພາະພວກເຂົາໃຈຮ້ອນຮົນເຫມືອນຢ່າງເຕົາອົບ, ພວກເຂົາກໍວາງແຜນລໍ້ລວງຂອງພວກເຂົາ.
ຄວາມໂກດຮ້າຍຢູ່ໃນໃຈຂອງພວກເຂົາຕະຫລອດຄືນ; ໃນຕອນເຊົ້າກໍລຸກໄຫມ້ເຫມືອນດັ່ງດັ່ງແປວໄຟ.
[7]ພວກເຂົາທັງປວງຕ່າງຮ້ອນເຫມືອນເຕົາອົບ, ແລະ ພວກເຂົາໄດ້ກືນກິນບັນດາຜູ້ປົກຄອງທັງຫລາຍເຫນືອພວກເຂົາ.
ບັນດາກະສັດທັງຫລາຍຂອງພວກເຂົາກໍລົ້ມລົງ; ບໍ່ມີໃຜໃນພວກເຂົາຮ້ອງຫາເຮົາ.
[8]ເອຟາຣາອິມກໍຮ່ວມກັບພວກຄົນເຫລົ່ານັ້ນ. ເອຟາຣາອິມເປັນຄືຂະຫນົມເຄັກທີ່ບໍ່ຟູທີ່ບໍ່ໄດ້ຖືກປີ້ນ.
[9]ຄົນຕ່າງຊາດໄດ້ກືນກິນເຫື່ອແຮງຂອງພວກເຂົາ, ແຕ່ພວກເຂົາບໍ່ຮູ້ສຶກຕົວ ຜົມຂອງພວກເຂົາກໍຫງອກ, ແຕ່ພວກເຂົາກໍຍັງບໍ່ຮູ້ສຶກໂຕເອງ.
[10]ຄວາມອວດໂຕຂອງອິດສະຣາເອນເປັນພະຍານຕໍ່ສູ້ພວກເຂົາເອງ; ແຕ່ພວກເຂົາບໍ່ກັບໄປຫາພຣະຢາເວພຣະເຈົ້າຂອງເຂົາ ແລະ
ບໍ່ໄດ້ສະແຫວງຫາພຣະອົງ, ເຖິງວ່າພົບເລື່ອງເຫລົ່ານີ້.[11]ເອຟາຣາອິມກໍເປັນເຫມືອນນົກກາງແກ, ໂງ່ຈ້າ, ແລະ ບໍ່ຮູ້ຈັກຄິດ,
ພວກເຂົາເອີ້ນຫາເອຢິບ, ແລ້ວບິນໄປຫາອັດຊີເຣຍ.
[12]ເມື່ອພວກເຂົາໄປ, ເຮົາຈະກາງຂ່າຍຂອງເຮົາອອກຄຸບພວກເຂົາ, ເຮົາຈະເອົາຝູງນົກທີ່ຕົກລົງມາຈາກທ້ອງຟ້າ. ເຮົາຈະລົງໂທດພວກເຂົາ
ໃນການທີ່ພວກເຂົາເຕົ້າໂຮມກັນ.[13]ວິບັດແກ່ພວກເຂົາ! ເພາະພວກເຂົາໄດ້ຫລົງໄປຈາກເຮົາ. ການທໍາລາຍທີ່ຮ້າຍແຮງກໍາລັງມາເຖິງພວກເຂົາ!
ພວກເຂົາເປັນກະບົດຕໍ່ສູ້ເຮົາ! ເຮົາຢາກຊ່ອຍພວກເຂົາ, ແຕ່ພວກເຂົາໄດ້ເວົ້າຕົວະຕໍ່ສູ້ເຮົາ.
[14]ພວກເຂົາບໍ່ໄດ້ຮ້ອງຫາເຮົາດ້ວຍສຸດໃຈຂອງພວກເຂົາ, ແຕ່ພວກເຂົາໄດ້ນອນຮ້ອງໄຫ້ເທິງບ່ອນນອນຂອງພວກເຂົາ.
ພວກເຂົາເຕົ້າໂຮມກັນຂໍເຂົ້າ ແລະ ເຫລົ້າອະງຸ່ນໃຫມ່, ແລະພວກເຂົາໄດ້ຫັນຫນ້າຫນີຈາກເຮົາ.[15]ເຖິງແມ່ນວ່າ ເຮົາໄດ້ຝຶກຝົນພວກເຂົາ ແລະ
ເສີມກໍາລັງແຂນຂອງພວກເຂົາ, ບັດນີ້ພວກເຂົາວາງແຜນຊົ່ວຕໍ່ສູ້ເຮົາ.
[16]ພວກເຂົາໄດ້ຫັນກັບ ແຕ່ພວກເຂົາບໍ່ໄດ້ຫັນກັບມາຫາເຮົາ, ຜູ້ຍິ່ງໃຫຍ່ສູງສຸດ. ພວກເຂົາເປັນເຫມືອນລູກຄັນທະນູທີ່ອ່ອນລ້າ.
ພວກຜູ້ນໍາຂອງພວກເຂົາຈະລົ້ມລົງດ້ວຍດາບເພາະຫລີ້ນທີ່ໂອ້ອວດຈອງຫອງຂອງພວກເຂົາ.
ນີ້ຈະກາຍເປັນເລື່ອງທີ່ພວກເຂົາຖືກເຍາະເຍີ້ຍໃນແຜ່ນດິນຂອງເອຢິບ.


generated on Tue Jun 17 19:01:42 2025

8 [1]“ຈົ່ງເອົາແກໄວ້ຢູ່ຮີມສົບ! ນົກອິນຊີກຳລັງບິນມາເຫນືອຄອບຄົວຂອງພຣະຢາເວ ເພາະປະຊາຊົນໄດ້ທຳລາຍພັນທະສັນຍາຂອງເຮົາ ແລະ
ໄດ້ກະບົດຕໍ່ສູ້ບັນຍັດຂອງເຮົາ.[2]ພວກເຂົາຮ້ອງຕໍ່ເຮົາວ່າ, 'ພຣະເຈົ້າຂອງຂ້ານ້ອຍ,
ພວກເຮົາຢູ່ໃນອິດສະຣາເອນ.'[3]ແຕ່ອິດສະຣາເອນໄດ້ປະຕິເສດສິ່ງທີ່ດີ, ແລະ ສັດຕູຈະໄລ່ລ່າພວກເຂົາ.

[4]ພວກເຂົາໄດ້ເລືອກເອົາພວກກະສັດ, ແຕ່ບໍ່ແມ່ນເຮົາ. ພວກເຂົາໄດ້ໃຫ້ເປັນອົງຊາຍ, ໂດຍປາດສະຈາກຄວາມຮູ້ຂອງເຮົາ. ດ້ວຍເງິນແລະຄໍາ
ພວກເຂົາໄດ້ສ້າງຮູບເຄົາລົບສໍາລັບພວກເຂົາເອງ,
ແຕ່ນັ້ນກໍເປັນພຽງແຕ່ການເຮັດໃຫ້ພວກເຂົາຖືກຕັດອອກໄປເທົ່ານັ້ນ."[5]"ງົວຂອງພວກເຈົ້າຖືກປະຕິເສດ, ຊາມາເລຍເອີຍ.
ຄວາມໂກດຮ້າຍເຮົາຄຽດແຄ້ນໄດ້ເຜົາໄຫມ້ປະຊາຊົນເຫລົ່ານີ້. ສະນັ້ນ ພວກເຂົາຍັງຈະຄົງຢູ່ໃນຄວາມຜິດອີກດົນປານໃດ?
[6]ເພາະຮູບເຄົາລົບນີ້ມາຈາກອິດສະຣາເອນ; ຄົນງານໄດ້ສ້າງມັນຂຶ້ນມາ; ມັນບໍ່ແມ່ນພຣະເຈົ້າ!
ລູກງົວຂອງຊາວຊາມາເລຍຈະແຕກຫັກເປັນທ່ອນໆ.[7]ເມື່ອປະຊາຊົນຫວ່ານລົມແລະເກັບກ່ຽວລົມພະຍຸ. ຕົ້ນເຂົ້າທີ່ບໍ່ອອກຮວງ;
ມັນບໍ່ອອກຜົນເພື່ອເຮັດແປ້ງ. ແຕ່ຖ້າມັນໃຫຍ່ຂຶ້ນເຕັມທີ່ແລ້ວ, ພວກຊາວຕ່າງຊາດກໍຈະກືນກິນມັນເສຍ.
[8]ອິດສະຣາເອນຖືກກືນກິນ; ບັດນີ້ພວກເຂົາຢູ່ທ່າມກາງຊົນຊາດທັງຫລາຍເຫມືອນກັບເປັນສິ່ງທີ່ໄຮ້ຄ່າ.
[9]ເພາະພວກເຂົາຂຶ້ນໄປຫາອັດຊີເຣຍເຫມືອນລາໂຕຫນຶ່ງທີ່ຢູ່ຕາມລໍາພັງ. ເອຟາຣາອິມໄດ້ຈ້າງພວກຄູ່ຮັກຂອງຕົນເອງ.
[10]ເຖິງວ່າພວກເຂົາໄດ້ຈ້າງຄູ່ຈາກທ່າມກາງຊົນຊາດທັງຫລາຍ, ບັດນີ້ເຮົາຈະຮວບຮວມເອົາພວກເຂົາມາໄວ້ນໍາກັນ. ພວກເຂົາຈະເລີ່ມອ່ອນແອລົງ
ເພາະການກົດຂີ່ຂົ່ມເຫັງຂອງກະສັດ ຂອງບັນດາເຈົ້າຊາຍທັງຫລາຍ.
[11]ຊາວເອຟາຣາອິມມີແທ່ນບູຊາຈໍານວນຫລາຍສໍາລັບການລ້າງບາບ, ແຕ່ພວກເຂົາໄດ້ກາຍເປັນແທ່ນບູຊາສໍາລັບເຮັດບາບແທນ.
[12]ເຮົາສາມາດຂຽນພຣະບັນຍັດຂອງເຮົາເປັນຫມື່ນໆຄັ້ງເພື່ອພວກເຂົາ, ແຕ່ພວກເຂົາຈະເບິ່ງວ່າເປັນບາງສິ່ງທີ່ແປກປະຫລາດສໍາລັບພວກເຂົາ.
[13]ເຊັ່ນດຽວກັບເຄື່ອງຖວາຍບູຊາທີ່ຖວາຍໃຫ້ແກ່ເຮົາ, ພວກເຂົາຖວາຍບູຊາຊີ້ນ ແລະ ກິນຊີ້ນນັ້ນ, ແຕ່ເຮົາຄືພຣະຢາເວ, ບໍ່ຍອມຮັບພວກເຂົາ.
ບັດນີ້ ເຮົາຈະຄິດເຖິງຄວາມຊົ່ວຂອງພວກເຂົາ ແລະ ລົງໂທດຄວາມຜິດບາບຂອງພວກເຂົາ. ພວກເຂົາຈະກັບຄືນໄປຍັງປະເທດເອຢິບອີກ.
[14]ປະຊາຊົນອິດສະຣາເອນໄດ້ຫລົງລືມເຮົາ, ພຣະຜູ້ສ້າງຂອງເຂົາແລ້ວ, ແລະພຣະອົງໄດ້ສ້າງພຣະຣາຊະວັງທັງຫລາຍ. ຢູດາ
ໄດ້ສ້າງເມືອງຫລາຍເມືອງ, ແຕ່ເຮົາຈະສົ່ງໄຟໄປຍັງເມືອງຕ່າງໆເຫລົ່ານັ້ນຂອງພວກເຂົາ; ໄຟນັ້ນຈະທໍາລາຍປ້ອມປາການທັງຫລາຍຂອງເຂົາ.


generated on Tue Jun 17 19:01:42 2025

9 1ປະຊາຊົນອິດສະຣາເອນເອີຍ, ຈົ່ງຢ່າຊື່ນຊົມຍິນດີ, ຢ່າມ່ວນຊື່ນເຫມືອນກັບຄົນອື່ນ. ເພາະພວກເຈົ້າເປັນຄົນບໍ່ສັດຊື່,
ປະຖິ້ມພຣະເຈົ້າຂອງພວກເຈົ້າ. ພວກເຈົ້າຮັກທີ່ຈະຈ່າຍຄ່າຈ້າງໃຫ້ຍິງໂສເພນີຄົນຫນຶ່ງທີ່ຕ້ອງການເອົາລານເຂົ້າທັງຫມົດ.2ແຕ່ລານເຂົ້າ ແລະ
ບໍ່ນ້ຳເຫລົ້າອະງຸ່ນໃຫມ່ບໍ່ໄດ້ລ້ຽງພວກເຂົາ; ກໍຈະເຮັດໃຫ້ພວກເຂົາບໍ່ສົມຫວັງ.

3ພວກເຂົາຈະບໍ່ອາໄສຢູ່ໃນແຜ່ນດິນຂອງພຣະຢາເວອີກຕໍ່ໄປ; ແຕ່ເອຟຣາອິມຈະກັບໄປດິນແດນເອຢິບແທນ, ແລະ
ມື້ຫນຶ່ງພວກເຂົາຈະກິນອາຫານທີ່ເປັນມົນທິນຂອງອັດຊີເຣຍ.4ພວກເຂົາຈະບໍ່ມີເຫລົ້າອະງຸ່ນຖວາຍແດ່ພຣະຢາເວ,
ແລະພວກເຂົາຈະບໍ່ເປັນທີ່ພໍພຣະໄທຂອງພຣະອົງ. ເຄື່ອງຖວາຍຂອງພວກເຂົາເປັນເຫມືອນອາຫານຂອງຄົນໄຫວ້ທຸກ:
ຄົນທັງຫລາຍທີ່ກິນອາຫານຂອງພວກເຂົາກໍຈະເປັນມົນທິນ ເພາະອາຫານຂອງພວກເຂົາກໍແມ່ນສຳລັບພວກເຂົາເທົ່ານັ້ນ;
ມັນຈະບໍ່ເອົາເຂົ້າມາໃນພຣະວິຫານຂອງພຣະຢາເວ.
5ພວກເຈົ້າຈະເຮັດແນວໃດ ໃນມື້ເທດສະການຕາມກຳນົດ, ໃນມື້ເທດສະການເພື່ອພຣະຢາເວຢ່າງນັ້ນ?6ເພາະເບິ່ງແມ,
ເຖິງວ່າພວກເຂົາຈະຫນີໄດ້ຈາກການທຳລາຍ, ຊາວເອຢິບຈະທ້ອນໂຮມພວກເຂົາ, ແລະ ຊາວເມັມຟິດຈະຝັງພວກເຂົາ.
ເພາະຄັງເງິນຂອງພວກເຂົາ—ຖືກຝຸ່ມຫນາມປົກຫຸ້ມໄວ້, ແລະເຮືອນຂອງພວກເຂົາກໍຈະເຕັມໄປດ້ວຍຫນາມ.
7ມື້ແຫ່ງການລົງໂທດກຳລັງມາເຖິງ; ມື້ແຫ່ງການແກ້ແຄ້ນກຳລັງມາ. ຂໍໃຫ້ອິດສະຣາເອນຮູ້ຈັກສິ່ງຕ່າງໆເຫລົ່ານີ້ເທີ້ນ. ເພາະຄວາມຊົ່ວຮ້າຍ,
ແລະເຈດຕະນາຮ້າຍອັນໃຫຍ່ຫລວງຂອງພວກເຂົາ ຈຶ່ງເຮັດໃຫ້ເປັນຜູ້ປະກາດພຣະຄຳເປັນຄົນໂງ່, ແລະຜູ້ໄດ້ຮັບການດົນໃຈເປັນຄົນຂາດສະຕິ.
8ພວກຜູ້ປະກາດພຣະຄຳຄືຄົນຍາມຂອງພຣະເຈົ້າ ຂອງຂ້ານ້ອຍເຫນືອຊາວເອຟຣາອິມ
ແຕ່ແຮ້ວນົກກໍຖືກຫ້າງໄວ້ຕາມເສັ້ນທາງທັງຫລາຍຂອງພວກເຂົາ, ແລະ ເຈດຕະນາຮ້າຍທີ່ມີຕໍ່ພວກເຂົາກໍຢູ່ໃນພຣະວິຫານຂອງພຣະເຈົ້າ.
9ພວກເຂົາໄດ້ທຳລາຍຕົນເອງໃຫ້ຕົກຕ່ຳລົງເຫມືອນຢ່າງໃນມື້ເຫລົ່ານັ້ນຢູ່ເມືອງກິເບອາ. ພຣະເຈົ້າຈະຊົງຈົດຈຳຄວາມບາບຊົ່ວຂອງພວກເຂົາ,
ແລະ ຊົງລົງໂທດຄວາມບາບຂອງພວກເຂົາ.
10ພຣະຢາເວຊົງກ່າວວ່າ, “ເມື່ອເຮົາພົບເຫັນອິດສະຣາເອນ, ກໍເຫມືອນພົບຫມາກອະງຸ່ນໃນຖິ່ນແຫ້ງແລ້ງກັນດານ.
ເຫມືອນກັບຜົນລະປູກທຳອິດຂອງຕົ້ນຫມາກເດື່ອ. ເຮົາໄດ້ພົບບັນພະບູລຸດທັງຫລາຍຂອງພວກເຈົ້າ, ແຕ່ພວກເຂົາໄດ້ໄປຫາພະເປໂອນ, ແລະ
ພວກເຂົາກໍໄດ້ອຸທິດຕົນຕໍ່ຮູບເຄົາລົບອັນຫນ້າອັບອາຍນັ້ນ. ພວກເຂົາຈຶ່ງເປັນທີ່ຫນ້າກຽດຊັງເຫມືອນກັບຮູບເຄົາລົບທີ່ພວກເຂົາຮັກນັ້ນ.
11ສ່ວນເອຟຣາອິມ, ສະຫງ່າຣາສີຂອງພວກເຂົາຈະບິນຫນີເຫມືອນນົກໂຕຫນຶ່ງ, ຈະບໍ່ມີການໃຫ້ກຳເນີດລູກ, ບໍ່ມີການຖືພາ,
ບໍ່ມີການປະຕິສົນທິ.12ເຖິງແມ່ນວ່າ ພວກເຂົາໄດ້ໃຫ້ກຳເນີດລູກທັງຫລາຍ, ແຕ່ເຮົາກໍຈະເອົາພວກເຂົາຫນີໄປເສຍໂດຍບໍ່ປະໄວ້ຈັກຄົນ.
ວິບັດແກ່ພວກເຂົາ ເມື່ອເຮົາຫັນຫນີຈາກພວກເຂົາ!
13ເຮົາໄດ້ເຫັນເອຟຣາອິມ, ຖືກປູກຂຶ້ນໃນທົ່ງຫນ້າເຫມືອນກັບເມືອງໄທຣະ, ແຕ່ເອຟຣາອິມຈະໃຫ້ກຳເນີດລູກທັງຫລາຍ
ຂອງພວກເຂົາແກ່ຄົນທີ່ຈະຂ້າພວກເຂົາຢ່າງໂຫດຮ້າຍ.”14ຊົງປະທານໃຫ້ພວກເຂົາເທີ້ນ, ພຣະຢາເວ—
ພຣະອົງຈະປະທານສິ່ງໃດໃຫ້ແກ່ພວກເຂົາຫລື? ຂໍຊົງປະທານມົດລູກທີ່ລຸລູກ ແລະ ເຕົ້ານົມທີ່ບໍ່ມີນ້ຳນົມໃຫ້ແກ່ພວກເຂົາ.
15ເພາະການຊົ່ວຮ້າຍທັງປວງຂອງພວກເຂົາໃນເມືອງກິນການ, ຈຶ່ງເປັນບ່ອນເລີ່ມຕົ້ນໃຫ້ເຮົາກຽດຊັງພວກເຂົາ. ເພາະວ່າພວກເຂົາເຮັດບາບຊົ່ວ,
ແທ້ຈິງ, ເຮົາຈະຂັບໄລ່ພວກເຂົາອອກຈາກພຣະວິຫານຂອງເຮົາ. ເຮົາຈະບໍ່ຮັກພວກເຂົາອີກຕໍ່ໄປ;
ພວກຜູ້ນຳທັງຫມົດຂອງພວກເຂົາເປັນຄົນກະບົດ.
16ເອຟຣາອິມປ່ວຍເປັນພະຍາດ, ແລະ ຮາກຂອງພວກເຂົາກໍຫ່ຽວແຫ້ງໄປ; ພວກເຂົາບໍ່ເກີດຫມາກ. ເຖິງວ່າ ພວກເຂົາຈະມີລູກຫລາຍ,
ເຮົາກໍຈະເຮັດໃຫ້ລູກທີ່ພວກເຂົາຮັກນັ້ນເສຍຊີວິດ.”17ພຣະເຈົ້າຂອງຂ້ານ້ອຍຈະປະຕິເສດພວກເຂົາ ເພາະພວກເຂົາບໍ່ເຊື່ອຟັງພຣະອົງ.
ພວກເຂົາຈະກາຍເປັນຄົນພະເນຈອນຢູ່ໃນທ່າມກາງຊົນຊາດທັງຫລາຍ.

 generated on Tue Jun 17 19:01:42 2025

# 10

[1]ອິດສະຣາເອນເປັນເຫມືອນເຄືອອະງຸ່ນທີ່ສົມບູນທີ່ອອກຫມາກດົກ. ຍິ່ງມີການເກີດຜົນຫລາຍເທົ່າໃດ,
ກໍຍິ່ງມີການສ້າງແທ່ນບູຊາຫລາຍເທົ່ານັ້ນ. ແຜ່ນດິນຂອງພວກເຂົາໄດ້ຮັບຜົນຜະລິດຫລາຍຂຶ້ນເທົ່າໃດ,
ພວກເຂົາກໍມີການປັບປຸງເສົາສັກສິດທັງຫລາຍຂອງພວກເຂົາຫລາຍຂຶ້ນ.[2]ຈິດໃຈຂອງພວກເຂົາບໍ່ສັດຊື່; ບັດນີ້
ພວກເຂົາຈະຕ້ອງໄດ້ຮັບຜົນແຫ່ງຄວາມຜິດຂອງຕົນ. ພຣະຢາເວຈະຊຶ່ງມ້າງແທ່ນບູຊາທັງຫລາຍຂອງເຂົາ;
ພຣະອົງຈະທຳລາຍເສົາສັກສິດຂອງພວກເຂົາ.

[3]ຈາກນັ້ນພວກເຂົາຈະເວົ້າວ່າ, “ພວກເຂົາບໍ່ມີກະສັດ, ເພາະວ່າພວກເຮົາບໍ່ຢຳເກງພຣະຢາເວ, ແລະ ກະສັດ—
ຈະເຮັດຫຍັງແດ່ໃຫ້ແກ່ພວກເຮົາໄດ້?”[4]ພວກເຂົາເວົ້າຂອງພວກເຂົາບໍ່ມີປະໂຫຍດຫຍັງ ແລະ ເປັນການໃຫ້ສັນຍາບໍ່ຈິງ. ດັ່ງນັ້ນ
ຄວາມຍຸດຕິທຳກໍງອກງາມຂຶ້ນເຫມືອນພືດທີ່ມີພິດທົ່ວທັງທົ່ງຫຍ້າ.”
[5]ຜູ້ທີ່ອາໄສຢູ່ໃນນະຄອນຊາມາເຣຍຈະຢ້ານກົວຍ້ອນລູກງົວແຫ່ງເມືອງເບັດອາເວນ. ປະຊາຊົນຂອງພວກມັນຈະໄຫວ້ທຸກ ແລະ
ພວກປະໂລຫິດຂອງຮູບເຄົາລົບຜູ້ຊຶ່ງມີຄວາມຍິນດີເຫນືອຮູບເຄົາລົບເຫລົ່ານັ້ນ ແລະ ຄວາມງົດງາມຂອງຮູບເຄົາລົບ, ກໍຈະບໍ່ມີອີກຕໍ່ໄປ.
[6]ພວກມັນຈະຖືກນຳໄປຍັງອັດຊີເຣຍ ເພື່ອເປັນເຄື່ອງບັນນາການແກ່ກະສັດອົງຍິ່ງໃຫຍ່. ເອຟຣາອິມຈະໄດ້ຮັບຄວາມເສື່ອມເສຍ ແລະ
ອິດສະຣາເອນຈະອັບອາຍຍ້ອນຮູບເຄົາລົບຂອງມັນ.
[7]ກະສັດຂອງຊະມາເຣຍຈະຖືກທຳລາຍ, ເຫມືອນກັບງ່າໄມ້ທີ່ຖືກນ້ຳພັດໄປ.[8]ປູ່ນິຍະສະຖານແຫ່ງຄວາມຊົ່ວຮ້າຍທັງຫລາຍຈະຖືກທຳລາຍ.
ນີ້ຄືຄວາມຜິດບາບຂອງອິດສະຣາເອນ! ຕົ້ນໄມ້ ແລະ ພືດທີ່ມີຫນາມ ຈະປົ່ງຂຶ້ນມາປົກຫຸ້ມແທ່ນບູຊາທັງຫລາຍຂອງພວກເຂົາ.
ປະຊາຊົນຈະເວົ້າຕໍ່ພູທັງຫລາຍວ່າ, “ຈົ່ງປົດບັງເຮົາໄວ້!” ແລະ ກ່າວກັບເນີນພູວ່າ, “ຈົ່ງລົ້ມທັບເຮົາເທີນ!”
[9]“ອິດສະຣາເອນເອີຍ, ພວກເຈົ້າໄດ້ເຮັດບາບມາຕັ້ງແຕ່ຄາວຢູ່ທີ່ເມືອງກິເບອາ; ພວກເຈົ້າຍັງສືບຕໍ່ເຮັດເລື້ອຍມາ.
ສົງຄາມຈະບໍ່ນຳມາທັນລູກຊາຍທັງຫລາຍ ຂອງຄວາມຜິດບາບໃນກິເບອາບໍ?
[10]ເມື່ອເຮົາປາດຖະຫນາ, ເຮົາຈະສັ່ງສອນພວກເຂົາ. ບັນດາ ຊົນຊາດທັງຫລາຍຈະຮ່ວມກັນຕໍ່ສູ້ ພວກເຂົາ ແລະ ລົງໂທດພວກເຂົາ
ຍ້ອນຄວາມຊົ່ວຮ້າຍສສອງເທົ່າຂອງພວກເຂົານັ້ນ.[11]ເອຟຣາອິມເປັນເຫມືອນງົວສາວທີ່ຖືກເຝິກແອບທີ່ມັກນວດເຂົ້າ, ດັ່ງນັ້ນ
ເຮົາຈະເອົາແອກວາງລົງໃສ່ຄໍອັນງົດງາມຂອງມັນ. ເຮົາຈະເອົາແອກວາາງໃສ່ຊາວເອຟຣາອິມ; ຢູດາຈະເປັນຜູ້ໄຖ່;
ຢາໂຄບຈະເປັນຜູ້ດຶງຄາດດ້ວຍຕົນເອງ.
[12]ຈົ່ງຫວ່ານຄວາມຊອບທຳເພື່ອໂຕພວກເຈົ້າເອງ, ແລະ ເກັບກ່ຽວພືດຜົນແຫ່ງພຣະສັນຍາຢ່າງສັດຊື່. ຈົ່ງໄຖໃນບ່ອນທີ່ຍັງບໍ່ໄດ້ໄຖ,
ເພາະມັນຮອດເວລາທີ່ເຈົ້າຈະສະແຫວງຫາພຣະຢາເວ, ຈົນກວ່າເຮົາຈະມາ ແລະ ຖອກເທຄວາມຊອບທຳລົງເຫນືອພວກເຈົ້າ.
[13]ພວກເຈົ້າໄດ້ໄຖ່ເອົາຄວາມຊົ່ວຮ້າຍ; ແລະ ເກັບກ່ຽວຄວາມອະທຳ. ພວກເຈົ້າໄດ້ກິນພືດຜົນຂອງການຕົວະ ເພາະວ່າ
ພວກເຈົ້າໄວ້ວາງໃຈໃນແຜນການທັງຫລາຍຂອງພວກເຈົ້າ ແລະ ໃນກຳລັງທະຫານອັນຫລວງຫລາຍຂອງພວກເຈົ້າ.
[14]ດັ່ງນັ້ນ ຄວາມວຸ້ນວາຍຂອງສົງຄາມຈະເກີດຂຶ້ນທ່າມກາງປະຊາຊົນຂອງພວກເຈົ້າ, ແລະ ປ້ອມປາການທັງຫລາຍໃນທຸກເມືອງຈະຖືກທຳລາຍ.
ມັນຈະເປັນຄືກັນກັບມື້ທີ່ຊາມັນ ໄດ້ທຳລາຍບັດອາເບນໃນວັນແຫ່ງສົງຄາມ,
ເມື່ອມານດາພ້ອມກັບລູກທັງຫລາຍຂອງພວກເຂົາຖືກທຸບຕີຢ່າງແຮງ.[15]ສິ່ງນີ້ແຫລະຈະເກີດຂຶ້ນກັບພວກເຈົ້າ, ຊາວເບັດເອນເອີຍ,
ຍ້ອນຄວາມຊົ່ວຮ້າຍທີ່ຍິ່ງໃຫຍ່ຂອງພວກເຈົ້າ. ໃນຍາມຮຸ່ງເຊົ້າ ກະສັດຂອງອິດສະຣາເອນຈະຖືກຕັດອອກຢ່າງຫມົດສິ້ນ.”


generated on Tue Jun 17 19:01:42 2025

# 11

[1]“ເມື່ອອິດສະຣາເອນເປັນເດັກນ້ອຍ ເຮົາກໍຮັກແພງລາວ, ແລະ ເຮົາໄດ້ເອີ້ນລູກຊາຍຂອງເຮົາໃຫ້ອອກມາຈາກປະເທດເອຢິບ.
[2]ແຕ່ເມື່ອພວກເຂົາຖືກເອີ້ນຫລາຍເທົ່າໃດ, ພວກເຂົາກໍຍິ່ງຫນີຫ່າງຈາກເຮົາຫລາຍຂຶ້ນເທົ່ານັ້ນ.
ພວກເຂົາໄດ້ຖວາຍເຄື່ອງບູຊາແກ່ພະບາອານ ແລະ ໄດ້ເຜົາເຄື່ອງຫອມບູຊາແດ່ຮູບເຄົາລົບ.

[3]ເຖິງປານນັ້ນເຮົາເປັນຄົນສອນເອຟຣາອິມການດຳເນີນຊີວິດ. ເຮົາກໍອຸ້ມເຂົາທັງຫລາຍໄວ້, ແຕ່ພວກເຂົາບໍ່ຮູ້ວ່າເຮົາເປັນຜູ້ດູແລພວກເຂົາ.
[4]ເຮົາໄດ້ນຳພວກເຂົາດ້ວຍແສ້ແຫ່ງມະນຸດຊະທຳ, ແລະ ສາຍຫັດແຫ່ງຄວາມຮັກ. ເຮົາເຮັດໃຫ້ແອກຢູ່ຄາງກະໄຕຂອງພວກເຂົາເບົາລົງ, ແລະ
ເຮົາໄດ້ຖ່ອມຕົວລົງມາຫາພວກເຂົາ ແລະ ລ້ຽງດູພວກເຂົາ.
[5]ພວກເຂົາຈະບໍ່ກັບຄືນໄປຍັງປະເທດເອຢິບອີກບໍ? ອັດຊີເຣຍຈະບໍ່ປົກຄອງພວກເຂົາ ເພາະວ່າພວກເຂົາປະຕິເສດທີ່ຈະກັບຄືນໄປຫາເຮົາຫລື?
[6]ດາບຈະຕົກລົງມາຍັງບັນດາຫົວເມືອງຂອງເຂົາ ແລະ ເພື່ອທຳລາຍບານປະຕູເມືອງຂອງພວກເຂົາ; ທຳລາຍພວກເຂົາ ເພາະແຜນການພວກເຂົາ.
[7]ປະຊາຊົນຂອງເຮົາໄດ້ຫນີໄປຈາກເຮົາ. ເຖິງວ່າພວກເຂົາຈະຮ້ອງຫາພຣະຜູ້ສູງສຸດ, ກໍບໍ່ມີໃຜຊ່ວຍພວກເຂົາໄດ້.
[8]ໂອ້ ເອຟຣາອິມເອີຍ, ເຮົາຈະປະຖິ້ມພວກເຈົ້າໄດ້ແນວໃດ? ໂອ້ ອິດສະຣາເອນເອີຍ, ເຮົາຈະປະພວກເຈົ້າໃຫ້ເປັນເຫມືອນອັດມາໄດ້ບໍ?
ເຮົາຈະເຮັດກັບພວກເຈົ້າເຫມືອນທີ່ເຮົາໄດ້ເຮັດກັບເມືອງເຊໂບອີມນັ້ນໄດ້ບໍ? ຈິດໃຈເຮົາກໍວຸ້ນວາຍ;
ຄວາມເມດຕາຂອງຂ້ານ້ອຍກໍແສນກະວົນກະວາຍ.[9]ເຮົາຈະບໍ່ລົງໂທດພວກເຈົ້າດ້ວຍຄວາມຄຽດແຄ້ນຂອງເຮົາ;
ເຮົາຈະບໍ່ທຳລາຍເອຟຣາອິມອີກ. ເພາະວ່າເຮົາເປັນພຣະເຈົ້າບໍ່ແມ່ນມະນຸດ; ເຮົາເປັນຜູ້ບໍຣິສຸດທີ່ຢູ່ທ່າມກາງພວກເຈົ້າ, ແລະ
ເຮົາຈະບໍ່ໂກດຮ້າຍພວກເຂົາອີກ.
[10]ເຮົາຈະຕິດຕາມພຣະຢາເວ; ແລະ ພຣະອົງຈະຊົງຮ້ອງແຜດສຽງເຫມືອນໂຕສິງ. ເມື່ອພຣະອົງຊົງຮ້ອງຂຶ້ນ,
ໄພ່ພົນຂອງພຣະອົງຈະຕິດຕາມມາດ້ວຍຄວາມຢຳເກງຈາກທິດຕາເວັນຕົກ.[11]ພວກເຂົາຈະມາດ້ວຍຄວາມຢ້ານກົວເຫມືອນນົກທີ່ມາຈາກເອຢິບ,
ເຫມືອນນົກເຂົາທີ່ອອກມາຈາກດິນແດນຂອງອັດຊີເຣຍ. ເຮົາຈະນຳພວກເຂົາໄປຢູ່ໃນບ້ານເຮືອນຂອງພວກເຂົາອີກ—
ນີ້ເປັນຄຳປະກາດຂອງພຣະຢາເວ.
[12]ເອຟຣາອິມອ້ອມຮອບເຮົາໄວ້ດ້ວຍການຕົວະ, ແລະ ອິດສະຣາເອນກໍເຕັມໄປດ້ວຍການຫລອກລວງ. ແຕ່ຊາວຢູດາກໍຍັງຕິດຕາມເຮົາ,
ພຣະເຈົ້າ, ແລະຊົງເປັນຜູ້ສັດຊື່, ບໍຣິສຸດແຕ່ອົງດຽວ."


generated on Tue Jun 17 19:01:42 2025

12 [1]ເອຟຣາອິມລ້ຽງຕົນດ້ວຍລົມ ແລະ ຕາມຫລັງລົມຕາເວັນອອກ. ເຂົາຍັງເພີ່ມການເວົ້າຕົວະ ແລະ ຄວາມຮຸນແຮງເພີ່ມຂຶ້ນເລື້ອຍໆ.
ພວກເຂົາໄດ້ເຮັດສັນຍາກັບອັດຊີເຣຍ ແລະ ໄດ້ຂົນນ້ຳມັນຫມາກກອກໄປເອຢິບ.[2]ພຣະຢາເວຊົງຟ້ອງຮ້ອງປະຊາຊົນຢູດາ ແລະ
ຈະຊົງລົງໂທດຢາໂຄບໃນສິ່ງທີ່ພວກເຂົາໄດ້ເຮັດ; ພຣະອົງຈະຊົງຕອບແທນຕາມການກະທຳຂອງພວກເຂົາ.

[3]ໃນທ້ອງຂອງແມ່ນັ້ນ ຢາໂຄບໄດ້ດຶງສົ້ນຕີນຂອງອ້າຍລາວ, ແລະ ເມື່ອລາວເປັນຜູ້ໃຫຍ່ລາວຕໍ່ສູ້ກັບພຣະເຈົ້າ.[4]ລາວໄດ້ປ້ຳສູ້ກັບເທວະດາ ແລະ
ໄດ້ຊະນະ. ລາວໄດ້ຮ້ອງໄຫ້ ແລະ ຂໍຄວາມເມດຕາ. ລາວພົບພຣະເຈົ້າຢູ່ເບັດເອນ; ໃນບ່ອນນັ້ນພຣະເຈົ້າຊົງກ່າວກັບລາວ.
[5]ນີ້ຄືພຣະຢາເວ, ພຣະເຈົ້າຈອມໂຢທາ; "ພຣະຢາເວ" ແມ່ນພຣະນາມທີ່ໄດ້ຮັບການຊົງເອີ້ນ.[6]ດ້ວຍເຫດນີ້ ຈົ່ງກັບມາຫາພຣະເຈົ້າຂອງພວກເຈົ້າ.
ຈົ່ງຮັກສາຄວາມສັດຊື່ແຫ່ງພຣະສັນຍາ ແລະ ຄວາມຍຸຕິທຳ, ແລະຄອຍຖ້າພຣະເຈົ້າຂອງເຈົ້າຢູ່ສະເຫມີ.
[7]ບັນດາພໍ່ຄ້າມີຊິງທີ່ຄົດໂກງຢູ່ໃນມືຂອງພວກເຂົາ; ພວກເຂົາມັກສໍ້ໂກງ.[8]ເອຟຣາອິມເວົ້າວ່າ, “ຂ້ານ້ອຍໄດ້ກາຍເປັນຄົນຮັ່ງມີຢ່າງແນ່ນອນ;
ຂ້ານ້ອຍໄດ້ຮັ່ງມີດ້ວຍໂຕຂອງຂ້ານ້ອຍເອງ. ໃນວຽກງານທຸກຢ່າງຂອງຂ້ານ້ອຍ ພວກເຂົາຈະບໍ່ພົບຄວາມຊົ່ວໃດໆໃນຂ້ານ້ອຍ,
ໃນທຸກໆສິ່ງທີ່ເປັນຄວາມບາບ."
[9]"ເຮົາເປັນພຣະຢາເວພຣະເຈົ້າຂອງພວກເຈົ້າ ຜູ້ຊຶ່ງນຳພວກເຈົ້າອອກຈາກແຜ່ນດິນເອຢິບ. ເຮົາຈະເຮັດໃຫ້ພວກເຈົ້າອາໄສຢູ່ໃນຕູບຜ້າເຕັນອີກ,
ເຫມືອນສະໄຫມທີ່ມີເທດສະການຕ່າງໆນັ້ນ.[10]ເຮົາໄດ້ເວົ້າກັບພວກຜູ້ປະກາດພຣະທຳ, ແລະ ໄດ້ໃຫ້ພວກເຂົາເຫັນນິມິດຫລາຍຢ່າງສຳລັບເຈົ້າ.
ໂດຍທາງຜູ້ປະກາດພຣະທຳ ເຮົາໄດ້ໃຫ້ຄຳອຸປະມາ."
[11]ຖ້າມີຄວາມຊົ່ວຢູ່ໃນກີເລອາດ, ພວກເຂົາທັງຫລາຍກໍບໍ່ມີຄ່າຢ່າງແນ່ນອນ. ໃນກິນການ ພວກເຂົາໄດ້ເອົາງົວມາເຜົາຖວາຍບູຊາ;
ແທ່ນບູຊາຂອງພວກເຂົາທັງຫລາຍຈຶ່ງຈະກາຍເປັນກອງຫີນຢູ່ໃນທົ່ງກວ້າງ.”[12]ຢາໂຄບຕ້ອງປົບຫນີໄປຍັງແຜ່ນດິນອາຣາມ;
ອິສະເອນຕ້ອງເຮັດວຽກເພື່ອຈະໄດ້ເມຍ; ແລະ ພວກເຂົາໄດ້ລ້ຽງຝູງແກະເພື່ອຈະເມຍ.
[13]ພຣະຢາເວຊົງນຳອິດສະຣາເອນອອກຈາກເອຢິບໂດຍຊົງໃຊ້ຜູ້ປະກາດພຣະທຳຄົນຫນຶ່ງ, ແລະ ໂດຍຜູ້ປະກາດພຣະທຳຄົນຫນຶ່ງ
ພຣະອົງຊົງລ້ຽງດູພວກເຂົາ.[14]ເອຟຣາອິມໄດ້ເຮັດໃຫ້ພຣະຢາເວຊົງໂກດຮ້າຍຢ່າງຂົມຂື່ນ. ດັ່ງນັ້ນ
ພຣະຜູ້ເປັນເຈົ້າຂອງພວກເຂົາຈະຊົງຖິ້ມເລືອດຂອງພຣະອົງໃສ່ພວກເຂົາ ແລະ ຕອບແທນພວກເຂົາດ້ວຍຄວາມເສື່ອມເສຍຂອງພຣະອົງ.

 generated on Tue Jun 17 19:01:42 2025

13 [1]"ເມື່ອເອຟາຣາອິມເວົ້າ, ກໍມີຄວາມຢ້ານກົວ. ພວກເຂົາຍົກຍ້ອງຕົນເອງໃນອິດສະຣາເອນ, ແຕ່ພວກເຂົາໄດ້ເຮັດຜິດ
ເພາະຂາບໄຫວ້ພະບາອານ, ແລະ ພວກເຂົາກໍຕາຍ.[2]ຕອນນີ້ ພວກເຂົາກໍຍິ່ງເຮັດບາບເພີ່ມຂຶ້ນເລື້ອຍໆ.
ພວກເຂົາຍັງຫລໍ່ຮູບດ້ວຍໂລຫະທີ່ເຮັດຈາກເງິນ, ຮູບເຄົາລົບຂາບທີ່ຫລໍ່ດ້ວຍສຸດຝີມືເທົ່າທີ່ເຮັດໄດ້, ພວກເຂົາທຸກຄົນເປັນຊ່າງຫັດຖະກຳ.
ຄົນກ່າວເຖິງພວກເຂົາວ່າ, 'ຄົນເຫລົ່ານີ້ເປັນຜູ້ຖວາຍເຄື່ອງບູຊາດ້ວຍການຈູບລູກງົວ.'

[3]ສະນັ້ນ ພວກເຂົາຈະເປັນເຫມືອນຫມອກໃນຍາມເຊົ້າ, ເປັນເຫມືອນນ້ຳຄ້າງທີ່ຈາງຫາຍໄປໃນຍາມຮຸ່ງເຊົ້າ,
ເປັນເຫມືອນແກບທີ່ປິວໄປຕາມສາຍລົມພັດຈາກລານຟາດເຂົ້າ, ແລະ ເປັນເຫມືອນຄວັນທີ່ອອກມາຈາກປ່ອງດູດຄວັນໄຟ.
[4]ແຕ່ເຮົາເປັນພຣະຢາເວພຣະເຈົ້າຂອງພວກເຈົ້າ ຕັ້ງແຕ່ແຜ່ນດິນເອຢິບ. ພວກເຈົ້າຕ້ອງຮັບຮູ້ວ່າບໍ່ມີພະອື່ນໃດນອກຈາກເຮົາ;
ພວກເຈົ້າຕ້ອງຮັບຮູ້ວ່ານອກຈາກເຮົາແລ້ວ, ບໍ່ມີພຣະຜູ້ຊ່ວຍໃຫ້ພົ້ນອົງອື່ນ.[5]ເຮົາຮູ້ວ່າພວກເຈົ້າຢູ່ໃນຖິ່ນແຫ້ງແລ້ງກັນດານ,
ໃນປະເທດແຫ້ງແລ້ງ.[6]ເມື່ອພວກເຈົ້າມີທົ່ງຫຍ້າ, ແລ້ວພວກເຈົ້າກໍໄດ້ກິນຈົນອີ່ມ; ແລະເມື່ອພວກເຈົ້າອີ່ມບໍລິບູນແລ້ວ,
ໃຈຂອງພວກເຈົ້າກໍໂອ້ອວດຈອງຫອງຂຶ້ນ. ເພາະເຫດນີ້ ພວກເຈົ້າຈຶ່ງລືມເຮົາ.
[7]ເຮົາຈະເປັນເຫມືອນໂຕສິງຕໍ່ພວກເຂົາ; ຈະເປັນເຫມືອນເສືອດາວທີ່ຄອຍຈອບເບິ່ງຢູ່ຕາມທາງຫຼວງ.
[8]ເຮົາຈະຕຸບພວກເຈົ້າເຫມືອນຫມີໂຕຫນຶ່ງທີ່ລູກມັນຖືກລັກໄປ. ເຮົາຈະຈີກຫນ້າເອິກພວກເຂົາ, ແລະ ເຮົາຈະກັດກິນພວກເຂົາເຫມືອນໂຕສິງ
ແລະ ຈີກພວກເຈົ້າອອກເປັນຕ່ອນໆ ຄືກັບສັດປ່າຈີກ.
[9]ເຮົາຈະທຳລາຍພວກເຈົ້າ, ອິດສະຣາເອນເອີຍ; ໃຜຈະຊ່ວຍພວກເຈົ້າໄດ້?[10]ຕອນນີ້ ກະສັດຂອງພວກເຈົ້າຢູ່ໃສ,
ຜູ້ຊຶ່ງອາດຊ່ວຍພວກເຈົ້າໃຫ້ປອດໄພໃນທຸກເມືອງຢູ່ໃສ? ພວກຜູ້ນຳຂອງພວກເຈົ້າຢູ່ໃສ, ຄົນທີ່ພວກເຈົ້າບອກກັບເຮົາວ່າ, 'ຂໍມອບກະສັດ ແລະ
ເຈົ້ານາຍໃຫ້ແກ່ພວກຂ້ານ້ອຍເທີ້ນ'?[11]ເຮົາໄດ້ເອົາກະສັດໃຫ້ພວກເຈົ້າດ້ວຍຄວາມຄຽດຂອງເຮົາ, ແລະ
ເຮົາໄດ້ເຂົາໄປດ້ວຍຄວາມໂກດຮ້າຍຂອງເຮົາ.
[12]ຄວາມຊົ່ວຮ້າຍຂອງເອຟາຣາອິມໄດ້ເພີ່ມສູງຂຶ້ນ; ຄວາມຜິດຂອງພວກເຂົາກໍ່ງອກຂຶ້ນ.[13]ການເຈັບທ້ອງເກີດລູກຈະມາເຖິງພວກເຂົາ,
ແຕ່ພວກເຂົາເປັນລູກຊາຍທີ່ໄຮ້ປັນຍາ, ເພາະເມື່ອເຖິງເວລາທີ່ຈະເກີດ, ພວກເຂົາບໍ່ໄດ້ອອກມາຈາກມົດລູກແມ່.
[14]ເຮົາຈະຊ່ວຍພວກເຂົາໃຫ້ພົ້ນມືຂອງຈາກແດນມໍລະນາຫລື? ເຮົາຈະຊ່ວຍພວກເຂົາໃຫ້ພົ້ນຈາກອຳນາດຂອງຄວາມຕາຍຫລື?
ຄວາມຕາຍເອີຍ, ໄພພິບັດຂອງເຈົ້າຢູ່ບ່ອນໃດ? ແດນມໍລະນາເອີຍ, ຄວາມຈິບຫາຍຂອງເຈົ້າຢູ່ບ່ອນໃດ?
ຄວາມເມດຕາໄດ້ຖືກເຊື່ອງໄວ້ຈາກສາຍຕາຂອງຂ້ານ້ອຍ."
[15]ເຖິງແມ່ນວ່າ ເອຟາຣາອິມໄດ້ຈະເລີນຮຸ່ງເຮືອງທ່າມກາງພີ່ນ້ອງຂອງພວກເຂົາ, ລົມທາງທິດຕາເວັນອອກຈະພັດມາ;
ລົມຂອງພຣະຢາເວກໍຈະມາຈາກຖິ່ນແຫ້ງແລ້ງກັນດານ. ນ້ຳພຸຂອງເອຟຣາຢິມກໍຈະແຫ້ງ, ແລະ ນ້ຳສ້າງຂອງພວກເຂົາກໍຈະບໍ່ມີນ້ຳ.
ສັດຕູຂອງພວກເຂົາຈະປຸ້ນເອົາເຄື່ອງຂອງມີຄ່າທຸກຢ່າງໄປຈາກຄັງຂອງເຂົາ.
[16]ຊະມາເລຍຈະມີຄວາມຜິດ, ເພາະນາງໄດ້ເປັນກະບົດຕໍ່ສູ້ພຣະເຈົ້າຂອງນາງ. ພວກເຂົາຈະລົ້ມລົງດ້ວຍດາບ;
ພວກລູກນ້ອຍຂອງພວກເຂົາຈະຖືກຟາດໃຫ້ມົ້ນ, ແລະ ແມ່ຍິງທີ່ຖືພາກໍຈະຖືກຜ່າທ້ອງ.

 generated on Tue Jun 17 19:01:42 2025

14 [1]ອິດສະຣາເອນເອີຍ, ຈົ່ງກັບຄືນມາຫາພຣະຢາເວພຣະເຈົ້າຂອງພວກເຈົ້າເທີນ,
ທີ່ພວກເຈົ້າໄດ້ລົ້ມລົງນັ້ນກໍຍ້ອນຄວາມຜິດບາບຂອງພວກເຈົ້າ.[2]ຈົ່ງນໍາເອົາຖ້ອຍຄໍາມາ ແລະກັບຄືນມາຫາພຣະຢາເວສາ.
ອ້ອນວອນຕໍ່ພຣະອົງວ່າ, “ຂໍຊົງໂຜດຍົກເອົາຄວາມຜິດບາບທັງປວງຂອງພວກຂ້ານ້ອຍ ແລະ ຂໍຊົງຮັບເອົາສິ່ງທີ່ດີແດ່ທ້ອນ,
ເພື່ອພວກຂ້ານ້ອຍຈະໄດ້ຖວາຍຫມາກແຫ່ງສົບປາກຂອງພວກຂ້ານ້ອຍ.

[3]ອັດຊີເຣຍຈະບໍ່ຊ່ວຍພວກຂ້ານ້ອຍ; ພວກເຮົາຈະບໍ່ໄດ້ຂີ່ລົດມ້າເຂົ້າໄປສູ່ສົງຄາມ.
ພວກເຮົາກໍຈະບໍ່ໄດ້ເວົ້າກັບສິ່ງທີ່ມືຂອງເຮົາສ້າງຂຶ້ນອີກຕໍ່ໄປວ່າ, 'ພະອົງເປັນພະທັງຫລາຍຂອງພວກຂ້ານ້ອຍ'
ເພາະລູກກໍາພ້າພໍ່ໄດ້ພົບຄວາມເມດຕາ.”
[4]"ເຮົາຈະຮັກສາພວກເຂົາຈາກການຫັນຫນີຂອງພວກເຂົາ; ເຮົາຈະຮັກພວກເຂົາຢ່າງບໍ່ມີເງື່ອນໄຂ,
ເພາະຄວາມໂກດຮ້າຍຂອງເຮົາໄດ້ຫັນຫນີຈາກພວກເຂົາແລ້ວ.[5]ເຮົາຈະເປັນຄືນ້ໍາຫມອກແກ່ຊົນຊາດອິດສະຣາເອນ;
ພວກເຂົາຈະເບັ່ງບານເຫມືອນດອກລິນລີ ແລະ ຮາກຈະຢັ່ງລົງເຫມືອນຢ່າງຕົ້ນສົນໃນປະເທດເລບານອນ.[6]ງ່າຂອງພວກມັນຊີ້ອອກ;
ຄວາມງົດງາມຂອງພວວກມັນຈະເຫມືອນຕົ້ນຫມາກກອກເທດ, ແລະ ກິ່ນຂອງມັນກໍຈະເຫມືອນຕົ້ນສົນໃນເລບານອນ.
[7]ບັນດາຜູ້ທີ່ອາໄສຢູ່ພາຍໃຕ້ການຄຸ້ມຄອງຂອງເຮົາຈະກັບຄືນມາ; ພວກເຂົາຈະຟື້ນຂຶ້ນເຫມືອເມັດເຂົ້າອີກ ແລະ ເກີດຜົນເຫມືອນເຄືອອະງຸ່ນ.
ຊື່ສຽງຂອງພວກເຂົາຈະເຫມືອນນ້ໍາເຫລົ້າອະງຸ່ນຂອງເລບານອນ.[8]ເອຟຣາອິມເອີຍ, ເຮົາຈະກ່ຽວຂ້ອງກັບຮູບເຄົາລົບອີກຫລາຍປານໃດ?
ເຮົາຈະຕອບສະຫນອງພວກເຂົາ ແລະ ຈະດູແລພວກເຂົາ. ເຮົາເປັນເຫມືອນຕົ້ນສົນທີ່ມີໃບຂຽວສົດຢູ່ສະເຫມີ;
ຜົນຂອງພວກເຈົ້າເກີດຂຶ້ນໄດ້ກໍເພາະເຮົາ.
[9]ໃຜຄືຜູ້ສະຫລາດທີ່ຈະເຂົ້າໃຈສິ່ງເຫລົ່ານີ້? ໃຜທີ່ເຂົ້າໃຈເຖິງສິ່ງເຫລົ່ານີ້ ເພື່ອພວກເຂົາຈະໄດ້ຮູ້ເລື່ອງເຫລົ່ານີ້?
ເພາະທາງຂອງພຣະຢາເວກໍຖືກຕ້ອງ, ແລະຄົນຊອບທໍາທັງຫລາຍກໍຈະເດີນໃນທາງນັ້ນ, ແຕ່ຄົນກະບົດຈະລົ້ມລົງໃນທາງນັ້ນ.

# ໂຢເອນ

1 [1]ນີ້ຄືຖ້ອຍຄໍາຂອງພຣະຢາເວທີ່ມາເຖິງໂຢເອນ ລູກຊາຍຂອງເປທູເອນມີດັ່ງນີ້.[2]ຈົ່ງຟັງເຖີດ, ຜູ້ອາວຸໂສທັງຫລາຍ, ແລະ
ທຸກໆຄົນທີ່ອາໃສໃນແຜ່ນດິນ. ສິ່ງເຫລົ່ານີ້ເຄີຍເກີດຂຶ້ນໃນສະໄຫມຂອງເຈົ້າທັງຫລາຍ ຫລື ໃນສະໄຫມຂອງບັນພະບູລຸດຂອງພວກເຈົ້າບໍ?
[3]ຈົ່ງເລົ່າເລື່ອງເຫລົ່ານີ້ໃຫ້ລູກເຈົ້າຟັງ, ແລະໃຫ້ລູກຂອງພວກເຈົ້າເລົ່າເລື່ອງນີ້ຕໍ່ໃຫ້ລູກໆຂອງພວກເຂົາຟັງ,
ແລະເພື່ອພວກເຂົາຈະສາມາດບອກລູກຫລານລຸ້ນຕໍ່ໄປຂອງພວກເຂົາໃນພາຍຫນ້າ.

[4]ພືດຜົນທີ່ເຫລືອຈາກຝູງຕັກແຕນຝູງຫນຶ່ງກິນ ຕັກແຕນອີກຝູງອື່ນກໍຈະມາກິນ; ແລະ ສິ່ງທີ່ເຫລືອຈາກຕັກແຕນຝູງນັ້ນກິນ
ພວກແມງໄມ້ທັງຫລາຍກໍຈະກິນຊ້ໍາ; ສິ່ງທີ່ເຫລືອຈາກຝູງແມງໄມ້ກິນກິນ ຝູງແມງບົ້ງກໍຈະມາກິນຊ້ໍາ.
[5]ຈົ່ງຕື່ນຂຶ້ນ, ພວກຂີ້ເຫລົ້າເອີຍ, ແລະຈົ່ງຮ້ອງໄຫ້ຄວນຄາງ! ພວກນັກດື່ມເຫລົ້າອະງຸ່ນເອີຍ, ຈົ່ງໂສກເສົ້າສາ
ເພາະເຫລົ້າອະງຸ່ນຫວານນັ້ນໄດ້ຖືກທໍາລາຍຫມົດແລ້ວ.[6]ດ້ວຍວ່າ ຊົນຊາດຫນຶ່ງທີ່ມີກໍາລັງແຮງ, ແລະ ມີຈໍານວນຫລວງຫລາຍ
ໄດ້ເຂົ້າມາໃນແຜ່ນດິນຂອງຂ້ານ້ອຍ. ແຂ້ວຂອງມັນກໍແຫລມຄົມເຫມືອນແຂ້ວສິງ, ແລະ ພວກມັນມີແຂ້ວຄົມໆຄືກັບສິງໂຕແມ່.
[7]ພວກມັນໄດ້ໃຫ້ສວນອະງຸ່ນຂອງຂ້ານ້ອຍກາຍເປັນສະຖານທີ່ຫນ້າຢ້ານ ແລະ
ພວກມັນໄດ້ແຫ້ນເປືອກກົກຫມາກເດື່ອຂອງຂ້ານ້ອຍຈົນຫມົດກ້ຽງ. ພວກມັນໄດ້ແຫ້ນເປືອກຂອງມັນ ແລະ ໂຍນຖິ້ມເສຍ;
ຈົນກິ່ງກ້ານຂອງມັນຫລ້ອນ.
[8]ຈົ່ງໂສກເສົ້າເຫມືອນຢ່າງຍິງສາວທີ່ນຸ່ງກະສອບປານໄຫວ້ອາໄລ ເພາະການຕາຍຂອງຜົວຂອງນາງສາ.[9]ເຄື່ອງຖວາຍບູຊາ ແລະ
ເຄື່ອງດື່ມບູຊາກໍຂາດຈາກພຣະວິຫານຂອງພຣະຢາເວ. ບັນດາປະໂລຫິດ, ຜູ້ປົວລະບັດຂອງພຣະຢາເວກໍໂສກເສົ້າ.
[10]ທົ່ງນາກໍໄດ້ຮັບຄວາມເສຍຫາຍ, ແຜ່ນດິນກໍງຽບເຫງົາໂສກເສົ້າ ເພາະເຂົ້າໄດ້ຖືກທໍາລາຍ, ເຫລົ້າອາງຸ່ນໃຫມ່ກໍເຫືອດແຫ້ງ,
ນ້ໍາມັນຫມາກກອກເທດກໍຂາດ.
[11]ຈົ່ງອັບອາຍເທີນ, ພວກເຈົ້າຊາວນາທັງຫລາຍເອີຍ, ພວກເຈົ້າຜູ້ເຝົ້າສວນອາງຸ່ນເອີຍ, ເພາະເນື່ອງຈາກເຂົ້າສາລີ ແລະ ເຂົ້າເດືອຍນັ້ນ.
ເພາະການເກັບກ່ຽວຈາກທົ່ງນາໄດ້ຖືກທໍາລາຍ.[12]ເຄືອອະງຸ່ນກໍລ່າເຫລືອງລົງ ແລະ ຕົ້ນເດື່ອກໍຫ່ຽວແຫ້ງຕາຍ, ຕົ້ນພິລາ,
ລວມທໍາຕົ້ນອິນທະຜາລໍາ, ແລະຕົ້ນອັບເປີ້ນດ້ວຍ—ຕົ້ນໄມ້ທັງປວງໄດ້ຫ່ຽວແຫ້ງຕາຍໄປ.
ເພາະຄວາມຊື່ນຊົມຍິນດີກໍໄດ້ສູນຫາຍໄປຈາກມະນຸດຊາດ.
[13]ຈົ່ງນຸ່ງຫົ່ມຜ້າກະສອບ ແລະໄຫວ້ທຸກ, ບັນດາປະໂລຫິດທັງຫລາຍເອີຍ! ຈົ່ງຮ້ອງໄຫ້, ທ່ານຜູ້ປົວລະບັດແທ່ນບູຊາ. ຈົ່ງມາ, ນຸ່ງຫົ່ມຜ້າກະສອບ,
ຜູ້ຮັບໃຊ້ພຣະເຈົ້າຂອງຂ້ານ້ອຍເອີຍ. ເພາະເຄື່ອງຖວາຍພືດຜົນເປັນເມັດ ແລະ ເຄື່ອງດື່ມບູຊາໄດ້ຂາດຈາກພຣະວິຫານຂອງພຣະເຈົ້າ.
[14]ຈົ່ງປະຊຸມເພື່ອຖືສິນອົດອາຫານອັນບໍຣິສຸດ, ແລະ ຈົ່ງເອີ້ນຊຸມນຸມບໍຣິສຸດ. ຈົ່ງເຕົ້າໂຮມເອົາບັນດາຜູ້ປົກຄອງ ແລະ
ຄົນທັງປວງທີ່ອາໄສຢູ່ໃນແຜ່ນດິນນີ້ເຂົ້າໄປໃນພຣະວິຫານແຫ່ງພຣະຢາເວພຣະເຈົ້າຂອງພວກເຈົ້າ, ແລະຮ້ອງຂໍຕໍ່ພຣະຢາເວເທີນ.
[15]ອະນິຈັງ! ເພາະມື້ແຫ່ງພຣະຢາເວໄດ້ໃກ້ເຂົ້າມາແລ້ວ. ມັນຈະມາດ້ວຍການທໍາລາຍຈາກພຣະຜູ້ເປັນເຈົ້າ.
[16]ພືດຜົນກໍຖືກທໍາລາຍໄປຕໍ່ຫນ້າຕໍ່ຕາພວກເຮົາ, ແລະ ການມ່ວນຊື່ນ ແລະ
ຄວາມຊື່ນຊົມຍິນດີກໍຈະຂາດຈາກພຣະວິຫານແຫ່ງພຣະເຈົ້າຂອງພວກເຮົາບໍ່ແມ່ນຫລື?[17]ພືດພັນໄດ້ຕາຍໄປໃນດິນແຫ້ງ, ສາງເຂົ້າກໍວ່າເປົ່າ,
ແລະ ເລົ້າເຂົ້າກໍຖືກມ້າງລົງ, ເພາະຕົ້ນເຂົ້າໄດ້ຫ່ຽວແຫ້ງຕາຍຫມົດ.
[18]ຝູງສັດກໍໂສກເສົ້າ! ຝູງງົວກໍທຸກລໍາບາກ ເພາະວ່າພວກມັນບໍ່ມີຫຍ້າກິນ. ເຊັ່ນດຽວກັນ, ຝູງແກະກໍທຸກລໍາບາກ.[19]ຂ້າແດ່ພຣະຢາເວ
ຂ້ານ້ອຍຮ້ອງທູນຕໍ່ພຣະອົງ. ເພາະໄຟໄດ້ເຜົາໄຫມ້ທົ່ງຫຍ້າໃນຖິ່ນແຫ້ງແລ້ງກັນດານຈົນຫມົດກ້ຽງແລ້ວ, ແລະ

ແປວໄຟໄດ້ເຜົາໄຫມ້ຕົ້ນໄມ້ທຸກຕົ້ນໃນທົ່ງ. [20]ແມ່ນແຕ່ບັນດາສັດທັງຫລາຍໃນປ່າກໍຮ້ອງຫາພຣະອົງ, ເພາະຕົ້ນນ້ຳກໍໄດ້ເຫືອດແຫ້ງຫມົດໄປ, ແລະຫຍ້າໃນທົ່ງກໍຖືກໄຟໄຫມ້ຫມົດ.

 generated on Tue Jun 17 19:01:42 2025

2 1ຈົ່ງເປົ່າແກທີ່ຊີໂອນ ແລະ ຈົ່ງເປັ່ງສຽງເຕືອນໄພເທິງຈອມພູສັກສິດຂອງເຮົາ! ໃຫ້ທຸກຄົນທີ່ອາໄສໃນແຜ່ນດິນນັ້ນຢ້ານຈົນໂຕສັ່ນ,
ເພາະມື້ຂອງພຣະຢາເວກຳລັງມາ; ແທ້ຈິງ, ມັນໃກ້ເຂົ້າມາແລ້ວ. 2ມື້ນັ້ນຈະມືດຄຶ້ມແລະເປັນທຸກ, ເປັນມື້ທີ່ມີເມກໜາ ແລະມືດຄຶ້ມ.
ເຫມືອນຕອນເຊົ້າມືດທີ່ປົກແຜ່ໄປທົ່ວເທິງພູ, ກອງທັບໃຫຍ່ມີຣິດອຳນາດກຳລັງໃກ້ເຂົ້າມາແລ້ວ. ບໍ່ມີກອງທັບໃດຈະເຫມືອນກອງທັບນີ້,
ແລະຈະບໍ່ມີຢ່າງນີ້ອີກຕໍ່ໄປ, ບໍ່ວ່າຈະຫລັງຈາກນີ້, ຫລື ຫລາຍຊົ່ວອາຍຸຄົນ.

3ໄຟກຳລັງເຜົາໄຫມ້ທຸກຢ່າງທີ່ຢູ່ທາງຫນ້າຂອງມັນ ແລະ ແປວໄຟກໍກຳລັງລາມໄປທາງຫລັງຂອງມັນ.
ທາງຫນ້າແຜ່ນດິນນັ້ນເປັນເຫມືອນສວນເອເດນ, ແຕ່ທາງຫລັງເປັນເຫມືອນຖິ່ນແຫ້ງແລ້ງກັນດານທີ່ຖືກທຳລາຍ, ແລະ
ບໍ່ມີສິ່ງໃດຫນີພົ້ນຈາກມັນໄປໄດ້.
4ຮູບຮ່າງຂອງກອງທັບນັ້ນເປັນເຫມືອນຝູງມ້າ, ແລະພວກມັນແລ່ນເຫມືອນກັບທະຫານລົດມ້າ. 5ເມື່ອພວກມັນໂດດ
ສຽງດັງເຫມືອນດັ່ງລົດຮົບຢູ່ເທິງຈອມພູທັງຫລາຍ, ເຫມືອນກັບສຽງແປວໄຟທີ່ໄຫມ້ຕໍເຟືອງໃນທົ່ງນາ, ແລະ
ເຫມືອນກອງທັບທີ່ກ້າຫານພ້ອມທີ່ຈະເຂົ້າສູ້ຮົບໃນສົງຄາມ.
6ເມື່ອມັນເຂົ້າມາໃກ້ ທຸກຄົນກໍຢ້ານຕົວສັ່ນ ແລະທຸກຄົນຫນ້າຈືດ. 7ພວກມັນແລ່ນເຫມືອນດັ່ງນັກຮົບຜູ້ກ້າຫານ;
ພວກມັນປີນກຳແພງເຫມືອນທະຫານ; ຕ່າງກໍຍ່າງໄປເປັນຖັນແຖວຢ່າງເປັນຈັງຫວະ, ແລະ ບໍ່ມີໂຕໃດແຕກແຖວເລີຍ.
8ພວກມັນຍ່າງໂດຍບໍ່ຕຳກັນເລີຍ; ພວກມັນຍ່າງໂດຍເປັນຂະບວນຕາມແຖວຂອງໃຜມັນ; ພວກມັນຜ່າດ່ານປ້ອງກັນ ແລະ ບໍ່ແຕກແຖວ.
9ພວກມັນຮົບເຂົ້າໄປເມືອງນັ້ນ, ພວກມັນແລ່ນຢູ່ເທິງກຳແພງ, ພວກມັນປີນຂຶ້ນໄປໃນເຮືອນທຸກຫລັງ, ແລະທາງປ່ອງຢ້ຽມເຫມືອນຢ່າງຄົນຂີ້ລັກ.
10ແຜ່ນດິນ ແລະ ທ້ອງຟ້າກໍສະທ້ານຫວັ່ນໄຫວຕໍ່ຫນ້າພວກມັນ, ດວງຕາເວັນ ແລະ ດວງເດືອນກໍມືດລົງໄປ, ແລະ
ດວງດາວທັງຫລາຍກໍບໍ່ສ່ອງສະຫວ່າງອີກຕໍ່ໄປ. 11ພຣະຢາເວເປັ່ງສຽງຕໍ່ຫນ້າກອງທັບຂອງພຣະອົງ,
ເພາະກອງທັບຂອງພຣະອົງມີຈຳນວນຫລວງຫລາຍ; ເພາະພວກມັນມີກຳລັງເຂັ້ມແຂງ, ພວກມັນສາມາດເຮັດຕາມຄຳສັ່ງຂອງພຣະອົງສຳເລັດ,
ເພາະມື້ນັ້ນ ເປັນມື້ທີ່ຍິ່ງໃຫຍ່ຂອງພຣະຢາເວ ແລະ ເປັນຕາຢ້ານຫລາຍ. ແມ່ນຜູ້ໃດນໍຈະຫນີພົ້ນໄປໄດ້?
12"ແຕ່ບັດນີ້," ພຣະຢາເວກ່າວວ່າ, "ຈົ່ງກັບມາຫາເຮົາດ້ວຍຄວາມເຕັມໃຈຂອງພວກເຈົ້າ. ຈົ່ງຖືສິນອົດ, ຈົ່ງໄຫວ້ວອນດ້ວຍການຮ້ອງໄຫ້, ແລະ
ຮ້ອງຄວນຄາງສາ.” 13ຈົ່ງເອົາໃຈຂອງເຈົ້າໃຫ້ເຮົາ ແລະ ບໍ່ແມ່ນແຕ່ເສື້ອຜ້າພາຍນອກ, ແລະຈົ່ງກັບມາຫາພຣະຢາເວພຣະເຈົ້າຂອງພວກເຈົ້າ.
ເພາະພຣະອົງເຕັມລົ້ນໄປດ້ວຍພຣະເມດຕາ, ຊົງຮ້າຍຊ້າ ແລະ ສັດຊື່ຕໍ່ຄຳຫມັ້ນສັນຍາຂອງພຣະອົງ,
ແລະພຣະອົງປາຖະຫນາທີ່ຈະປ່ຽນໃຈຈາກການລົງໂທດພວກເຈົ້າ.
14ໃຜຈະຮູ້ໄດ້? ບາງທີພຣະອົງອາດຈະຊົງປ່ຽນໃຈ ແລະ ອີດູຕົນ, ແລະພຣະອົງຈະພຣະພອນໄວ້ເບື້ອງພຣະອົງ, ເຄື່ອງຖວາຍບູຊາເປັນເມັດ ແລະ
ເຄື່ອງດື່ມບູຊາແດ່ພຣະເຢເວພຣະເຈົ້າຂອງພວກເຈົ້າບໍ່ແມ່ນບໍ?
15ຈົ່ງເປົ່າແກເທິງພູຊີໂອນ, ຈົ່ງພາກັນຖືສິນອົດອາຫານບໍຣິສຸດ ແລະ ເອີ້ນຊຸມນຸມບໍຣິສຸດ. 16ຈົ່ງເຕົ້າໂຮມບັນດາປະຊາຊົນ,
ໃຫ້ເຂົ້າຮ່ວມຊຸມນຸມອັນບໍຣິສຸດ, ຈົ່ງນຳພວກເຖົ້າແກ່, ລວມເຖິງພວກເດັກນ້ອຍ ແລະ ເດັກແດງມາເຕົ້າໂຮມກັນ.
ແມ່ນແຕ່ຜູ້ແຕ່ງງານໃຫມ່ຄືເຈົ້າບ່າວ, ແລະ ເຈົ້າສາວ ກໍຈົ່ງໃຫ້ພວກເຂົາອອກມາຈາກເຮືອນກ່ອນ.
17ຈົ່ງໃຫ້ພວກປະໂລຫິດ, ຜູ້ຮັບໃຊ້ພຣະຢາເວ, ໂສກເສົ້າຮ້ອງໄຫ້ ລະຫວ່າງປະຕູ ແລະ ແທ່ນບູຊາ. ໃຫ້ພວກເຂົາອ້ອນວອນວ່າ,
“ຂໍໄວ້ຊີວິດໄພ່ພົນຂອງພຣະອົງດ້ວຍເທີ້ນ, ພຣະຢາເວເອີຍ, ແລະ ຂໍຢ່າເຮັດໃຫ້ມໍລະດົກຂອງພຣະອົງຖືກຫມິ່ນປະຫມາດ,
ຂໍຢ່າໃຫ້ຊົນຊາດອື່ນເວົ້າເຍາະເຍີ້ຍພວກເຂົາ. ເປັນຫຍັງຈຶ່ງເຮັດໃຫ້ຊົນຊາດທັງຫລາຍທ່າມກາງພວກເຂົາກ່າວວ່າ,
'ພຣະເຈົ້າຂອງພວກເຂົາຢູ່ໃສ?'”
18ແລ້ວພຣະຢາເວຊົງສະແດງຄວາມເປັນຫ່ວງແຜ່ນດິນຂອງພຣະອົງ ແລະ ຊົງເມດຕາໄພ່ພົນຂອງພຣະອົງ.
19ພຣະຢາເວໄດ້ຊົງຕອບໄພ່ພົນຂອງພຣະອົງວ່າ, “ເບິ່ງແມ, ເຮົາຈະໃຫ້ເຂົ້າ, ເຫລົ້າອະງຸ່ນ ແລະ ນ້ຳມັນແກ່ພວກເຈົ້າ.
ພວກເຈົ້າຈະໄດ້ອີ່ມຫນຳສຳລານ, ແລະ ເຮົາຈະບໍ່ເຮັດໃຫ້ພວກເຈົ້າຕ້ອງໄດ້ຮັບຄວາມອັບອາຍ ທ່າມກາງຊົນຊາດອື່ນອີກຕໍ່ໄປ.
20ເຮົາຈະຂັບໄລ່ພວກທີ່ຮຸກຮານອອກໄປຈາກພວກເຈົ້າ, ແລະ ຈະຂັບໄລ່ພວກມັນໄປຍັງຖິ່ນແຫ້ງແລ້ງກັນດານ ແລະ ວ່າງເປົ່າ.
ຂະບວນກອງທັບແນວຫນ້າຂອງພວກມັນຈະໄປທາງທະເລຕາເວັນອອກ, ແລະ ຂະບວນກອງທັບແນວຫລັງຈະໄປທາງທະເລຕາເວັນຕົກ.
ທີ່ນັ້ນຈະມີກິ່ນເຫມັນເກີດຂຶ້ນ, ແລະກິ່ນເຫມັນນັ້ນກໍຈະສົ່ງກິ່ນອອກໄປທົ່ວ.” ແນ່ນອນວ່າ, ສິ່ງຍິ່ງໃຫຍ່ເຫລົ່ານີ້ແມ່ນພຣະອົງເປັນຜູ້ກະທຳ.
21ໂອແຜ່ນດິນເອີຍ, ຢ່າຢ້ານເລີຍ, ຈົ່ງຊື່ນຊົມຍິນດີສາ, ເພາະວ່າພຣະຢາເວຈະກະທຳສິ່ງທີ່ຍິ່ງໃຫຍ່. 22ສັດທັງຫລາຍເອີຍ, ຢ່າຢ້ານເລີຍ,
ເພາະບັນດາທົ່ງນາກໍຈະຂຽວສົດແລ້ວ, ກົກໄມ້ກໍຈະເກີດຫມາກ, ກົກເດື່ອ ແລະ ເຄືອອະງຸ່ນກໍມີບໍລິບູນ. 23ຈົ່ງຍິນດີ, ຊາວຊີໂອນເອີຍ,
ຈົ່ງຊື່ນຊົມຍິນດີໃນພຣະຢາເວພຣະເຈົ້າຂອງພວກເຈົ້າເທີ້ນ. ເພາະພຣະອົງຊົງໂຜດຖອກເທຝົນລົງມາໃຫ້ພວກເຈົ້າຖືກຕ້ອງຕາມລະດູການ,
ຄືຝົນຕົ້ນລະດູ ແລະ ປາຍລະດູເຫມືອນຢ່າງແຕ່ກ່ອນ.
24ເຂົ້າໃນລານກໍຈະມີເຕັມບໍລິບູນ, ແລະ ຖັງທຸກຫນ່ວຍຈະເຕັມລົ້ນດ້ວຍເຫລົ້າອະງຸ່ນ ແລະ ນ້ຳມັນຫມາກກອກ.
25ເຮົາກໍຈະທົດແທນຄືນໃຫ້ໃນສິ່ງທີ່ພວກເຈົ້າໄດ້ສູນເສຍໃນປີທີ່ຕັກແຕນໃຫຍ່ມາກິນເຄື່ອງປູກຂອງຝັງຂອງພວກເຈົ້ານັ້ນ—
ຝູງຕັກແຕນຈຳນວນຫລວງຫລາຍ, ແລະລວມທັງສິ່ງທີ່ຕັກແຕນທຳລາຍ—ກອງທັບທີ່ກ້າຫານຂອງເຮົາວ່າ ເຮົາໄດ້ສົ່ງມາທ່າມກາງພວກເຈົ້າ.
26ພວກເຈົ້າຈະກິນຢ່າງເຫລືອເຟືອ ແລະ ອີ່ມຫນຳສຳລານ, ແລະ ຈົ່ງສັນລະເສີນພຣະນາມຂອງພຣະຢາເວພຣະເຈົ້າຂອງພວກເຈົ້າ,
ຜູ້ຊົງເຮັດການອັດສະຈັນທ່າມກາງພວກເຈົ້າ, ແລະ ຈະບໍ່ນຳການຫມິ່ນປະມາດເຫນືອໄພ່ພົນຂອງເຮົາອີກ. 27ອິດສະຣາເອນເອີຍ
ແລ້ວພວກເຈົ້າຈະຮູ້ວ່າເຮົາຢູ່ທ່າມກາງພວກເຈົ້າ, ແລະຮູ້ວ່າເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ, ແລະ ບໍ່ມີພຣະເຈົ້າອື່ນອີກນອກຈາກເຮົາ,
ແລະເຮົາຈະບໍ່ນຳການຫມິ່ນປະຫມາດມາສູ່ໄພ່ພົນຂອງເຮົາອີກ.
28ຫລັງຈາກນັ້ນ ເຮົາຈະຖອກເທພຣະວິນຍານຂອງເຮົາລົງມາເທິງມະນຸດທຸກຄົນ, ແລະ
ບັນດາລູກຊາຍລູກຍິງຂອງພວກເຈົ້າຈະກ່າວຄຳທຳນວາຍ. ພວກຜູ້ເຖົ້າກໍຈະຝັນເຫັນ, ພວກຄົນຫນຸ່ມກໍຈະເຫັນນິມິດ.
29ໃນເວລານັ້ນເຮົາຈະຖອກເທພຣະວິນຍານຂອງເຮົາລົງມາ, ເທິງຜູ້ຮັບໃຊ້ຊາຍຍິງທັງຫລາຍຂອງເຮົາ.


generated on Tue Jun 17 19:01:42 2025

[30]ເຮົາຈະສະແດງການອັດສະຈັນໃນທ້ອງຟ້າ ແລະ ເທິງແຜ່ນດິນໂລກຄື ເລືອດ, ໄຟ, ແລະ ເສົາຄວັນໄຟໃຫຍ່.[31]ດວງອາທິດຈະມືດໄປ ແລະ
ດວງເດືອນຈະກາຍເປັນສີແດງເຫມືອນເລືອດ, ກ່ອນມື້ອັນຍິ່ງໃຫຍ່ ແລະ ຫນ້າຢ້ານຂອງພຣະຢາເວມາເຖິງ.
[32]ແຕ່ຄົນທັງຫລາຍທີ່ຮ້ອງອອກໃນພຣະນາມຂອງພຣະຢາເວຈະພົ້ນ. ເພາະວ່າເທິງພູຊີໂອນ ແລະ ໃນກຸງເຢຣູຊາເລັມຈະມີຄົນຫນີໄປ,
ດັ່ງທີ່ພຣະຢາເວໄດ້ກ່າວໄວ້, ແລະ ທ່າມກາງຜູ້ທີ່ລອດຊີວິດ, ຄືຄົນເຫລົ່ານັ້ນຜູ້ທີ່ພຣະຢາເວຊົງເອີ້ນໄວ້.


generated on Tue Jun 17 19:01:42 2025

3 1ເບິ່ງແມ, ໃນວັນເຫລົ່ານັ້ນ ແລະ ໃນເວລານັ້ນ, ເມື່ອເຮົານຳພວກຊະເລີຍຂອງຢູດາ ແລະ ເຢຣູຊາເລັມກັບມາ,
2ເຮົາຈະເຕົ້າໂຮມຊົນຊາດທັງປວງ, ແລະ ນຳພວກເຂົາທັງຫລາຍໄປຍັງຮ່ອມພູເຢໂຮຊາຟັດ. ເພື່ອພິພາກສາພວກເຂົາໃນບ່ອນນັ້ນ,
ເພາະວ່າໄພ່ພົນຂອງເຮົາ ແລະ ຊົນຊາດອິດສະຣາເອນທີ່ເປັນສົມບັດຂອງເຮົາ, ຊຶ່ງໄດ້ຖືກກະຈັດກະຈາຍໄປໃນຊົນຊາດຕ່າງໆ, ແລະ
ຍ້ອນພວກເຂົາໄດ້ແບ່ງແຜ່ນດິນຂອງເຮົາ. 3ພວກເຂົາໄດ້ຈົກສະຫລາກແບ່ງໄພ່ພົນຂອງເຮົາໄປເປັນຊະເລີຍ, ແລະໄດ້ຂາຍເດັກຊາຍໄປໂສເພນີ,
ແລະ ຂາຍເດັກນ້ອຍຜູ້ຍິງເພື່ອເຫລົ້າອະງຸ່ນ ເພື່ອໃຫ້ພວກເຂົາໄດ້ດື່ມ.

4ບັດນີ້, ເປັນຫຍັງພວກເຈົ້າຈຶ່ງໂກດຮ້າຍເຮົາ, ເມືອງຕີເຣ, ເມືອງຊີໂດນ ແລະ ທົ່ວປະເທດຟີລິດສະຕິນ? ພວກເຈົ້າຢາກຈະແກ້ແຄ້ນເຮົາບໍ?
ຖ້າເຈົ້າຄິດຈະແກ້ແຄ້ນເຮົາ, ເຮົາຈະຕອບແທນການກະທຳຂອງພວກເຈົ້າທັນທີ. 5ເພາະພວກເຈົ້າໄດ້ຂົນເອົາເງິນແລະທອງຄຳຂອງເຮົາໄປ, ແລະ
ພວກເຈົ້າໄດ້ຂົນເອົາເຄື່ອງຂອງອັນມີຄ່າຂອງເຮົາໄປຍັງວິຫານທັງຫລາຍຂອງພວກເຈົ້າ. 6ພວກເຈົ້າໄດ້ຂາຍຊາວຢູດາ ແລະ
ເຢຣູຊາເລັມກັບຊາວກຣີກ, ເພື່ອເຮັດໃຫ້ພວກເຂົາຢູ່ຫ່າງໄກ ຈາກເຂດແດນຂອງພວກເຂົາ.
7ເບິ່ງແມ, ເຮົາກຳລັງກໍກວນພວກເຂົາ, ໃຫ້ອອກຈາກບ່ອນທີ່ພວກເຈົ້າຂາຍພວກເຂົານັ້ນ, ແລະ ຈະຕອບແທນສິ່ງທີ່ພວກເຈົ້າເຮັດກັບພວກເຂົາ.
8ເຮົາຈະຂາຍບັນດາລູກຊາຍຍິງຂອງພວກເຈົ້າໃຫ້ຊາວຢູດາ. ພວກເຂົາຈະຂາຍຄົນເຫລົ່ານັ້ນໃຫ້ກັບຊາວເຊບາ, ໃຫ້ຊົນຊາດຫນຶ່ງທີ່ຢູ່ຫ່າງໄກ.
ເພາະພຣະຢາເວກ່າວດັ່ງນີ້ແຫລະ.
9ຈົ່ງປະກາດຂໍ້ຄວາມນີ້ໃຫ້ແກ່ຊົນຊາດທັງຫລາຍ, 'ຈົ່ງຈັດຕຽມການຮົບ, ປຸກລະດົມຄົນທີ່ກ້າຫານທັງຫລາຍ, ໃຫ້ພວກເຂົາເຂົ້າມາໃກ້,
ໃຫ້ທຸກຄົນທີ່ພ້ອມໃນການສູ້ຮົບທັງຫມົດຂຶ້ນມາ. 10ຈົ່ງຕີໃບມີດຄັນໄຖຂອງພວກເຈົ້າໃຫ້ເປັນດາບ ແລະ ຕີກ່ຽວຂອງພວກເຈົ້າໃຫ້ເປັນຫອກ.
ແມ່ນແຕ່ຜູ້ອ່ອນແອກໍໃຫ້ເວົ້າວ່າ, "ຂ້ານ້ອຍເປັນຄົນເຂັ້ມແຂງ."
11ຈົ່ງຮີບຟ້າວ ແລະມາເທີ້ນ, ຊົນຊາດທັງຫມົດທີ່ຢູ່ອ້ອມແອ້ມ, ຈົ່ງເຕົ້າໂຮມກັນກັນຢູ່ທີ່ນັ້ນ. ພຣະຢາເວ,
ນຳກອງທັບອັນກ້າຫານຂອງພຣະອົງລົງມາ.'
12ໃຫ້ຊົນຊາດທັງຫລາຍຕ້ອງຕຽມພ້ອມຢູ່ສະເຫມີ ແລະ ຂຶ້ນມາຢູ່ຮ່ອມພູເຢໂຮຊາຟັດ.
ເພາະຢູ່ບ່ອນນັ້ນເຮົາຈະນັ່ງພິພາກສາຊົນຊາດທັງຫລາຍທີ່ຢູ່ອ້ອມຮອບແຖບນັ້ນ. 13ຈົ່ງເອົາກ່ຽວມາ, ເພາະມັນຮອດລະດູເກັບກ່ຽວແລ້ວ. ມາເທີ້ນ,
ມາບີບຫມາກອະງຸ່ນ, ເພາະບໍ່ຢຽບຫມາກອະງຸ່ນກໍເຕັມ. ຖັງເຫລົ້າອະງຸ່ນກໍລົ້ນ, ເພາະຄວາມຊົ່ວຮ້າຍຂອງພວກເຂົາມີຢ່າງຫລວງຫລາຍ."
14ເກີດມີຄວາມວຸ້ນວາຍ, ຄືຄວາມວຸ້ນວາຍຢູ່ໃນຮ່ອມພູແຫ່ງການພິພາກສາ. ເພາະມື້ແຫ່ງພຣະຢາເວໄດ້ໃກ້ເຂົ້າມາແລ້ວ
ຢູ່ໃນພູແຫ່ງການພິພາກສາ. 15ດວງຕາເວັນ ແລະ ດວງເດືອນຈະມືດຄຶ້ມໄປ, ດວງດາວທັງຫລາຍກໍບໍ່ສ່ອງແສງອີກ.
16ພຣະຢາເວຊົງເປັ່ງພຣະສຸລະສຽງຈາກພູຊີໂອນ, ແລະ ຊົງຮ້ອງສຽງດັງສະໜັ່ນຈາກເຢຣູຊາເລັມ. ຈົນຟ້າສະຫວັນ
ແລະແຜ່ນດິນໂລກຈະຫວັ່ນໄຫວ, ແຕ່ພຣະຢາເວຊົງເປັນທີ່ກຳບັງໃຫ້ແກ່ໄພ່ພົນຂອງພຣະອົງ ແລະ ເປັນປ້ອມປາການໃຫ້ແກ່ຄົນອິດສະຣາເອນ.
17"ເພື່ອພວກເຈົ້າຈະຮູ້ວ່າ ເຮົາຄືພຣະຢາເວພຣະເຈົ້າຂອງພວກເຈົ້າ, ຜູ້ສະຖິດຢູ່ເທິງພູຊີໂອນອັນສັກສິດຂອງເຮົາ.
ແລ້ວເຢຣູຊາເລັມຈະເປັນນະຄອນທີ່ສັກສິດ, ແລະບໍ່ມີຜູ້ໃດຈະເຂົ້າມາຮຸກຮານເມືອງນັ້ນອີກ.
18ເມື່ອເວລານັ້ນມາເຖິງ ເຫລົ້າອະງຸ່ນຫວານຈະໄຫລອອກມາຈາກບັນດາພູເຂົາທັງຫລາຍ, ບັນດາເນີນພູກໍຈະມີນ້ຳນົມໄຫລອອກມາ,
ຫ້ວຍຮ່ອງທັງຫມົດຂອງຢູດາກໍຈະມີນ້ຳໄຫລຢ່າງບໍລິບູນ, ແລະ ຈະມີນ້ຳອອກບໍ່ໄຫລອອກມາຈາກພຣະວິຫານຂອງພຣະຢາເວ ແລະ
ນ້ຳນັ້ນຈະໄຫລຜ່ານຮ່ອມພູຊິດຕິມ. 19ປະເທດເອຢິບຈະກາຍເປັນເມືອງຮ້າງ, ເມືອງເອໂດມຈະກາຍເປັນຖິ່ນແຫ້ງແລ້ງກັນດານ,
ເພາະພວກເຂົາກະທຳຄວາມໂຫດຮ້າຍຕໍ່ຊາວຢູດາ, ເພາະພວກເຂົາໄດ້ເຮັດໃຫ້ເລືອດທີ່ບໍ່ມີຄວາມຜິດໄຫລອອກໃນດິນແດນຂອງພວກເຂົາ.
20ແຕ່ຊາວຢູດາຈະອາໄສຢູ່ຕະຫລອດໄປ, ແລະ ເຢຣູຊາເລັມຈະອາໄສຢູ່ຈາກຄົນລຸ້ນຫນຶ່ງໄປສູ່ອີກລຸ້ນຫນຶ່ງ.
21ເຮົາຈະແກ້ແຄ້ນທີ່ເຂົາທັງຫລາຍໄດ້ຕາຍ ທີ່ເຮົາຍັງບໍ່ທັນໄດ້ແກ້ແຄ້ນນັ້ນ," ເພາະພຣະຢາເວຢູ່ເທິງພູຊີໂອນ.

# ອາໂມດ

1 1ນີ້ແມ່ນເລື່ອງກ່ຽວກັບອິດສະຣາເອນທີ່ອາໂມດ, ຜູ້ລ້ຽງແກະຄົນຫນຶ່ງໃນເມືອງເຕໂກອາ, ໄດ້ຮັບການຊົງເປີດເຜີຍ.
ທ່ານໄດ້ຮັບສິ່ງເຫລົ່ານີ້ໃນສະໄຫມຂອງອຸດຊີຢາ ກະສັດຂອງຊາວຢູດາ, ແລະ ໃນຣາຊະການທີ່ເຢໂຣໂບອາມ ລູກຊາຍຂອງໂຢອາດ
ກະສັດແຫ່ງອິດສະຣາເອນ, ກ່ອນແຜ່ນດິນໄຫວສອງປີ. 2ທ່ານກ່າວວ່າ, "ພຣະຢາເວຈະຊົງເປັ່ງສຽງຮ້ອງມາຈາກພູຊີໂອນ;
ພຣະສຸລະສຽງຂອງພຣະອົງຍັງດັງກ້ອງຈາກນະຄອນເຢຣູຊາເລັມ. ປ່າຫຍ້າທັງຫລາຍຂອງບັນດາຜູ້ລ້ຽງແກະກໍຫ່ຽວແຫ້ງໄປ; ຍອດພູກາເມນ
ກໍຈະຫ່ຽວແຫ້ງ."

3ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: "ເພາະຄວາມຜິດບາບຂອງຊາວດາມາເຊທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາໄດ້ນວດກີເລອາດດ້ວຍເຄື່ອງນວດເຫລັກ. 4ເຮົາຈະສົ່ງໄຟເຂົ້າໄປໃນເຮືອນຂອງຊາວດາມາເຊ, ແລະ
ໄຟຈະເຜົາໄຫມ້ປ້ອມປາການຂອງເບັນຮາດັດ.
5ເຮົາຈະຫັກກອນປະຕູຂອງດາມາເຊ ແລະຕັດພວກທີ່ອາໄສຢູ່ຕາມຮ່ອມພູອາເວນ, ແລະຜູ້ທີ່ຖືໄມ້ຄ້ອນເທົ້າໃນເບັດເອເດັນ.
ປະຊາຊົນຂອງອາຣາມຈະໄປເປັນຊະເລີຍຢູ່ເມືອງກີເຣ," ພຣະຢາເວກ່າວດັ່ງນີ້ແຫລະ.
6ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: "ເພາະຄວາມຜິດບາບຂອງພວກຄາຊາທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາກວາດເອົາປະຊາຊົນທັງຫມົດໄປເປັນຊະເລີຍ, ແລ້ວມອບຊະເລີຍທັງຫມົດໃຫ້ແກ່ເອໂດມ.
7ເຮົາຈະສົ່ງໄຟມາເທິງກຳແພງເມືອງຂອງຄາຊາ, ແລະໄຟນັ້ນຈະເຜົາໄຫມ້ປ້ອມປາການທັງຫລາຍຂອງເມືອງນັ້ນ.
8ເຮົາຈະຕັດຜູ້ທີ່ອາໃສຢູ່ໃນເມືອງອາຊະໂດດ ແລະ ຜູ້ທີ່ຖືໄມ້ຄ້ອນເທົ້າຈາກເມືອງອາຊະກາໂລນອອກໄປ.
ເຮົາຈະຫັນມືຂອງເຮົາໄປຕໍ່ສູ້ກັບເມືອງເອັກໂຣນ, ແລະຄົນເມືອງຟີລິດສະຕິນທີ່ຍັງເຫລືອຈະພິນາດ,"
ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ.

[9]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: “ເພາະຄວາມຜິດບາບຂອງຊາວເມືອງຕີເຣໄດ້ທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາໄດ້ມອບປະຊາຊົນທັງຫມົດໃຫ້ແກ່ເອໂດມ, ແລະ ພວກເຂົາໄດ້ຫັກພັນທະສັນຍາແຫ່ງຄວາມເປັນພີ່ນ້ອງກັນ.
[10]ເຮົາຈະສົ່ງໄຟລົງມາເທິງກຳແພງເມືອງໄທຣະ, ແລະ ໄຟຈະເຜົາໄຫມ້ປ້ອມປາການທັງຫລາຍຂອງເມືອງນັ້ນ.”
[11]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ, “ເພາະຄວາມຜິດບາບຂອງຊາວເອໂດມທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະເຂົາໄດ້ໄລ່ຂ້ານ້ອງຊາຍດ້ວຍດາບ ແລະປະຄວາມສົງສານທັງຫມົດຖິ້ມໄປ. ຄວາມຄຽດຊັງຂອງເຂົາລຸຮ້ອນຢູ່ຕະຫລອດເວລາ,
ແລະຄວາມໂມໂຫຂອງເຂົາກໍມີຢູ່ສະເຫມີ.[12]ເຮົາຈະສົ່ງໄຟລົງມາເຫນືອເຕມານ,
ແລະໄຟນັ້ນຈະເຜົາໄຫມ້ພຣະຣາຊະວັງທັງຫລາຍຂອງເມືອງໂບຊະລາ.”
[13]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ, “ເພາະຄວາມຜິດບາບຂອງຊາວອຳໂມນທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາໄດ້ຜ່າທ້ອງແມ່ມານຂອງເມືອງກິເລອາດ, ເພື່ອພວກເຂົາຈະໄດ້ຂະຫຍາຍອານາເຂດແດນຂອງພວກເຂົາ.
[14]ເຮົາຈະຈູດກຳແພງເມືອງຣັບບາ, ແລະ ໄຟນັ້ນຈະເຜົາໄຫມ້ພຣະຣາຊະວັງທັງຫລາຍ, ພ້ອມກັບສຽງໂຫ່ຮ້ອງໃນມື້ເສິກສົງຄາມ,
ດ້ວຍຄວາມປັ່ນປ່ວນໃນວັນທີ່ມີພາຍຸຫມຸນ.[15]ກະສັດຂອງພວກເຂົາກໍຈະຕົກໄປເປັນຊະເລີຍ, ທັງຕົວກະສັດ
ພ້ອມບັນດາຂ້າຣາດຊະການຂອງກະສັດນຳ,” ພຣະຢາເວຊົງກ່າວດັ່ງນີ້ແຫລະ.

 generated on Tue Jun 17 19:01:42 2025

2 [1]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: “ເພາະຄວາມຜິດບາບຂອງຊາວໂມອາບທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາໄດ້ເຜົາກະດູກຂອງກະສັດແຫ່ງເອໂດມຈົນເປັນຝຸ່ນປູນຂາວ.

[2]ເຮົາຈະສົ່ງໄຟລົງມາເທິງໂມອາບ, ແລະ ໄຟນັ້ນຈະເຜົາໄຫມ້ປ້ອມປາການທັງຫລາຍຂອງເມືອງເກຣິໂຢດເສຍ.
ໂມອາບຈະຕາຍໃນທ່າມກາງສຽງວຸ້ນວາຍ, ພ້ອມກັບຮ້ອງ ແລະສຽງແກດັງສະຫນັ່ນ.[3]ເຮົາຈະທຳລາຍຜູ້ປົກຄອງຂອງເມືອງນັ້ນ,
ພ້ອມທັງຈະປະຫານບັນດາອົງຊາຍທັງຫມົດພ້ອມກັບເຂົາ,” ພຣະຢາເວຊົງກ່າວດັ່ງນີ້ແຫລະ.
[4]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: “ເພາະຄວາມຜິດບາບຂອງຢູດາທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາປະຕິເສດຂໍ້ບັນຍັດຂອງພຣະຢາເວ ແລະ ບໍ່ໄດ້ຖືຮັກສາຄຳສັ່ງຂອງພຣະອົງ.
ຄຳຕົວະທັງຫລາຍຂອງພວກເຂົາເຮັດໃຫ້ພວກເຂົາເດີນຫລົງໄປຕາມທາງທີ່ບັນພະບຸລຸດຂອງພວກເຂົາເຄີຍດຳເນີນມາ.
[5]ເຮົາຈະສົ່ງໄຟລົງເຫນືອຢູດາ, ແລະໄຟນັ້ນຈະເຜົາໄຫມ້ປ້ອມປາການຕ່າງໆໃນນະຄອນເຢຣູຊາເລັມ.”
[6]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ: “ເພາະຄວາມຜິດບາບຂອງອິດສະຣາເອນທັງສາມເທື່ອ, ແມ້ແຕ່ສີ່ເທື່ອ, ເຮົາຈະບໍ່ຫັນຈາກການລົງໂທດ,
ເພາະພວກເຂົາໄດ້ຂາຍຄົນຊອບທຳພຽງເພື່ອເງິນແລະຂາຍຄົນຍາກຈົນເພື່ອຊື້ເກີບພຽງຄູ່ດຽວ.
[7]ພວກເຂົາໄດ້ຢຽບຫົວຂອງຄົນຍາກຈົນຄືກັບຄົນທີ່ຢຽບຂີ້ຝຸ່ນເທິງພື້ນດິນ; ພວກເຂົາໄດ້ຊຸກຄົນທີ່ອຸກອັ່ງໃຈອອກໄປເສຍ.
ທັງພໍ່ແລະລູກກໍພາກັນຫລັບນອນກັບຍິງສາວຄົນດຽວກັນ ແລະເຮັດໃຫ້ພຣະນາມອັນບໍຣິສຸດຂອງເຮົາເປັນມົນທິນ.
[8]ພວກເຂົາໄດ້ນອນຢູ່ຂ້າງແທ່ນບູຊາທຸກແທ່ນເທິງເສື້ອຜ້າທີ່ຍຶດມາເປັນຂອງຈຳນຳ, ແລະໃນພຣະວິຫານແຫ່ງພະເຈົ້າຂອງພວກເຂົາ,
ພວກເຂົາໄດ້ດື່ມເຫລົ້າອະງຸ່ນຈາກບັນດາຄົນທີ່ຖືກປັບໄຫມ.
[9]ແຕ່ເຮົາໄດ້ທຳລາຍຄົນອະໂມຣິດຕໍ່ຫນ້າພວກເຂົາ, ຄວາມໃຫຍ່ສູງຂອງພວກເຂົາເຫມືອດັ່ງຕົ້ນສົນສີດາ;
ພວກເຂົາແຂງແຮງເຫມືອນດັ່ງຕົ້ນໂອກ. ແຕ່ເຮົາກໍໄດ້ທຳລາຍຜົນຂອງພວກເຂົາທີ່ຢູ່ປາຍ ຈົນຮອດຮາກທັງຫລາຍທີ່ຢູ່ພື້ນດິນ.[10]ແລະ,
ເຮົາໄດ້ນຳພວກເຈົ້າອອກມາຈາກປະເທດເອຢິບ ແລະນຳພວກເຈົ້າທ່ຽວວົນວຽນຢູ່ໃນໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີ
ເພື່ອໃຫ້ພວກເຈົ້າໄດ້ຄອບຄອງແຜ່ນດິນຂອງຄົນອະໂມຣິດ.
[11]ເຮົາໄດ້ຕັ້ງພວກຜູ້ປະກາດພຣະທຳ ຈາກທ່າມກາງລູກຊາຍຂອງພວກເຈົ້າ ແລະພວກນາຊີຣີຈາກບັນດາຊາຍຫນຸ່ມຂອງພວກເຈົ້າ. ໂອ້
ຄົນອິດສະຣາເອນເອີຍ, ບໍ່ແມ່ນດັ່ງນັ້ນຫລື?—ນີ້ເປັນຄຳປະກາດຂອງພຣະຢາເວ.[12]ແຕ່ພວກເຈົ້າໄດ້ຊັກຊວນໃຫ້ຄົນນາຊີຣີດື່ມເຫລົ້າອະງຸ່ນ
ແລະສັ່ງຫ້າມພວກຜູ້ປະກາດພຣະທຳບໍ່ໃຫ້ປະກາດພຣະຄຳ.
[13]ເບິ່ງແມ, ເຮົາຈະບົດບີບພວກເຈົ້າເຫມືອນດັ່ງກວຽນໃສ່ເຂົ້າຈົນເຕັມລົ້ນ ສາມາດບົດບີບບາງຄົນໄດ້.[14]ຄົນທີ່ແລ່ນໄວກໍບໍ່ສາມາດແລ່ນປົບຫນີໄດ້;
ຄົນທີ່ແຂງແຮງກໍອ່ອນກຳລັງລົງ; ເຊັ່ນດຽວກັບ ຄົນທີ່ກຳລັງກໍບໍ່ສາມາດຊ່ວຍເຫລືອຕົນເອງໄດ້.
[15]ນັກຍິງທະນູກໍບໍ່ສາມາດຢືນຢູ່ໄດ້; ນັກແລ່ນໄວກໍແລ່ນຫນີບໍ່ພົ້ນ; ຄົນທີ່ຂີ່ມ້າກໍບໍ່ສາມາດຊ່ວຍຊີວິດຂອງຕົນໃຫ້ພົ້ນໄດ້.
[16]ແມ້ແຕ່ທະຫານຜູ້ກ້າຫານທີ່ສຸດ ກໍຈະແລ່ນເປືອຍໂຕປົບຫນີໃນວັນນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ.”

 generated on Tue Jun 17 19:01:42 2025

3 [1]ຈົ່ງຟັງຄຳທີ່ພຣະຢາເວຊົງກ່າວໂທດເຖິງພວກເຈົ້າ, ໂອ້ຄົນອິດສະຣາເອນເອີຍ,
ກ່າວໂທດທັງຕະກູນທັງຫມົດທີ່ເຮົາໄດ້ນຳອອກມາຈາກແຜ່ນດິນເອຢິບ, [2]"ເຮົາໄດ້ເລືອກພວກເຈົ້າເທົ່ານັ້ນ
ຈາກຕະກູນທັງສິ້ນຂອງແຜ່ນດິນໂລກ. ເຫດສະນັ້ນ ເຮົາຈະລົງໂທດພວກເຈົ້າ ຍ້ອນຄວາມຜິດບາບທັງຫລາຍຂອງພວກເຈົ້າ."

[3]ສອງຄົນຈະຍ່າງໄປດ້ວຍກັນໄດ້ບໍ ນອກຈາກພວກເຂົາໄດ້ຕົກລົງກັນກ່ອນແລ້ວ?[4]ສິງຈະຮ້ອງແຜດສຽງໃນປ່າ ຫລືຖ້າມັນບໍ່ໄດ້ພົບເຫຍື່ອ?
ສິງຫນຸ່ມຈະຮ້ອງແຜດສຽງອອກຈາກຖ້ຳຂອງມັນຫລື ຖ້າມັນຄຸບເຫຍື່ອບໍ່ໄດ້?
[5]ນົກຈະຖືກກັບດັກເທິງດິນໄດ້ ຫລືຖ້າບໍ່ມີເຫຍື່ອລໍ້ມັນ? ກັບດັກຈະລັ່ນບໍ ຖ້າວ່າບໍ່ມີສິ່ງໃດເຂົ້າໄປຕິດກັບດັກນັ້ນ?[6]ເມື່ອເປົ່າເຂົາສັດດັງຂຶ້ນໃນເມືອງ
ແລ້ວປະຊາຊົນຈະບໍ່ຕົກໃຈຢ້ານຫລື? ໄພພິບັດຈະເກີດຂຶ້ນໃນເມືອງ ໂດຍທີ່ພຣະຢາເວບໍ່ໄດ້ສົ່ງມາຫລື?
[7]ແນ່ນອນວ່າ ພຣະຢາເວອົງພຣະຜູ້ເປັນເຈົ້າຈະບໍ່ຊົງກະທຳສິ່ງໃດໂດຍບໍ່ໄດ້ເປີດເຜີຍແຜນການ ຂອງພຣະອົງໃຫ້ແກ່ບັນດາຜູ້ປະກາດພຣະທຳ
ຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງຮູ້ກ່ອນ.[8]ເມື່ອໂຕສິງຮ້ອງແຜດສຽງຂຶ້ນ; ໃຜແດ່ຈະບໍ່ຢ້ານ? ເມື່ອພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວ;
ແລ້ວໃຜຈະບໍ່ເຜີຍແຜ່ພຣະທຳຂອງພຣະອົງຫລື?
[9]ຈົ່ງປະກາດເລື່ອງນີ້ໃນບັນດາປ້ອມປາການທີ່ເມືອງອາຊະໂດດ, ແລະໃນບັນດາປ້ອມປະການໃນແຜ່ນດິນເອຢິບ; ກ່າວວ່າ,
"ຈົ່ງມາປະຊຸມກັນຢູ່ເທິງພູເຂົາທັງຫລາຍຂອງຊາມາເຣຍ ແລະເບິ່ງຄວາມສັບສົນວຸ້ນວາຍອັນໃຫຍ່ໃນເມືອງນັ້ນ,
ແລະການກົດຂີ່ຂົ່ມເຫັງທີ່ຢູ່ໃນເມືອງນັ້ນ.[10]ເພາະພວກເຂົາບໍ່ຮູ້ຈັກການກະທຳທີ່ຖືກຕ້ອງ—ນີ້ເປັນຄຳປະກາດຂອງພຣະຢາເວ—
ພວກເຂົາໄດ້ສະສົມຄວາມຮຸນແຮງ ແລະ ຄວາມພິນາດໄວ້ໃນປ້ອມປາການຂອງພວກເຂົາ."
[11]ເພາະສະນັ້ນ, ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວ, "ສັດຕູຈະມາອ້ອມແຜ່ນດິນ. ເຂົາຈະທຳລາຍປ້ອມປາການທັງຫລາຍຂອງພວກເຈົ້າລົງ
ແລ້ວປຸ້ນເອົາສິ່ງຂອງໃນປ້ອມປາການທັງຫລາຍຂອງພວກເຈົ້າ."[12]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວວ່າ,
"ເຊັ່ນດຽວກັບຜູ້ລ້ຽງແກະທີ່ຍາດເອົາໄດ້ພຽງແຕ່ຂາສອງຂ້າງ, ຫລື ຫູເບື້ອງຫນຶ່ງຈາກປາກສິງເທົ່ານັ້ນ,
ດັ່ງນັ້ນຄົນອິດສະຣາເອນທີ່ອາໄສຢູ່ໃນຊາມາເຣຍກໍຈະໄດ້ຮັບການຊ່ວຍກູ້ເຊັ່ນນັ້ນ, ໂດຍໄດ້ພຽງແຕ່ບ່ອນນອນມູມຫນຶ່ງເທົ່ານັ້ນ,
ຫລືຕຽງມູມຫນຶ່ງເທົ່ານັ້ນ."
[13]ຈົ່ງຟັງ ແລະເປັນພະຍານກ່າວໂທດເຊື້ອສາຍຂອງຢາໂຄບ—ນີ້ເປັນຄຳປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າຈອມໂຍທາ,
[14]"ເພາະໃນມື້ນັ້ນທີ່ເຮົາລົງໂທດຄວາມຜິດບາບທັງຫລາຍຂອງພວກອິດສະຣາເອນ, ເຮົາກໍຈະລົງໂທດແທ່ນບູຊາຂອງເບັດເອນເຫມືອນກັນ.
ຖານຮອງທັງຫລາຍຂອງແທ່ນບູຊານັ້ນ ກໍຈະຖືກຕັດອອກ ແລະຕົກລົງດິນທີ່ພື້ນດິນ.
[15]ເຮົາຈະທຳລາຍເຮືອນພັກລະດູຫນາວພ້ອມເຮືອນພັກລະດູຮ້ອນ. ສ່ວນເຮືອນພັກຊຶ່ງງາຊ້າງຈະເພພັງລົງ,
ແລະເຮືອນຫລັງໃຫຍ່ຈະຖືກທຳລາຍຈົນຫມົດກ້ຽງ,—ນີ້ເປັນຄຳປະກາດຂອງພຣະຢາເວ."

4 [1]ຈົ່ງຟັງຄຳນີ້ເທີນ, ພວກເຈົ້າແມ່ງົວອ້ວນພີທັງຫລາຍ ແຫ່ງບາຊານ, ພວກເຈົ້າຜູ້ອາໄສເທິງພູເຂົາຂອງຊະມາເລຍ,
ພວກເຈົ້າຜູ້ກົດຂີ່ຂົ່ມເຫັງຄົນທຸກຍາກ, ພວກເຈົ້າຜູ້ບີດບີບຜູ້ຂັດສົນ, ພວກເຈົ້າຜູ້ບອກຜົວຂອງຕົນວ່າ,
“ເອົາເຄື່ອງດື່ມທັງຫລາຍມາໃຫ້ເຮົາ.”[2]ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ຊົງສາບານດ້ວຍຄວາມບໍຣິສຸດຂອງພຣະອົງວ່າ, “ເບິ່ງແມ,
ວັນນັ້ນຈະມາເຖິງພວກເຈົ້າ ເມື່ອພວກເຂົາຈະເອົາລາກພວກເຈົ້າໄປ, ຈົນເຖິງຄົນສຸດທ້າຍຂອງພວກເຈົ້າດ້ວຍຂໍເບັດ.

[3]ພວກເຈົ້າຈະຜ່ານໄປຕາມຊ່ອງແຕກຂອງກຳແພງເມືອງ, ແຕ່ລະຄົນທີ່ຜ່ານໄປທາງນັ້ນ, ແລະພວກເຈົ້າຈະຖືກໂຍນອອກໄປທາງອາບໂມນ—
ນີ້ເປັນຄຳປະກາດຂອງພຣະຢາເວ.”
[4]"ຈົ່ງພາກັນໄປທີ່ເມືອງເບັດເອັນ ແລະເຮັດຜິດບາບສາ, ໄປທີ່ເມືອງກິນການ ແລະເຮັດຜິດບາບໃຫ້ຫລາຍກວ່າເກົ່າ,
ນຳເຄື່ອງຖວາຍຂອງພວກເຈົ້າມາຖວາຍທຸກເຊົ້າ, ແລະຖວາຍຫນຶ່ງສ່ວນສິບຂອງພວກເຈົ້າທຸກໆສາມມື້.
[5]ຈົ່ງຖວາຍເຄື່ອງບູຊາແຫ່ງການຂອບພຣະຄຸນດ້ວຍເຂົ້າຈີ່; ແລະຈົ່ງປະກາດການຖວາຍຕາມໃຈສະຫມັກ; ຈົ່ງປະກາດໃຫ້ຮູ້ທົ່ວກັນ,
ເພາະສິ່ງນີ້ເປັນສິ່ງທີ່ພວກເຈົ້າມັກ, ໂອ້ ພວກເຈົ້າຄົນອິດສະຣາເອນເອີຍ—ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ.
[6]ເຮົາໄດ້ເຮັດໃຫ້ແຂ້ວຂອງພວກເຈົ້າບໍ່ມີຍັງຕິດຢູ່ເລີຍໃນເມືອງທັງຫມົດຂອງພວກເຈົ້າ ແລະ ການຂາດແຄນອາຫານໃນທຸກແຫ່ງຂອງພວກເຈົ້າ.
ແຕ່ພວກເຈົ້າກໍບໍ່ຍອມກັບຄືນມາຫາເຮົາ —ນີ້ເປັນການປະກາດຂອງພຣະຢາເວ.[7]ເຮົາກໍໄດ້ສັ່ງໃຫ້ຝົນເຊົາຕົກ
ເຖິງວ່າຍັງເຫລືອອີກສາມເດືອນກວ່າຈະເຖິງເກັບກ່ຽວກໍຕາມ. ເຮົາໄດ້ສັ່ງໃຫ້ຝົນຕົກລົງໃນເມືອງຫນຶ່ງ, ແລະສັ່ງບໍ່ໃຫ້ຝົນຕົກອີກໃນເມືອງຫນຶ່ງ.
ດິນແຫ່ງຫນຶ່ງໄດ້ຮັບນ້ຳຝົນ, ສ່ວນດິນອື່ນບໍ່ໄດ້ຮັບ, ແຕ່ດິນທີ່ບໍ່ໄດ້ຮັບຝົນກໍແຫ້ງແລ້ງ.
[8]ສອງ ຫລືສາມເມືອງຕ້ອງໄດ້ກະເຊືອກກະສົນໄປອີກເມືອງຫນຶ່ງເພື່ອຊອກຫານ້ຳດື່ມ, ແຕ່ພວກເຈົ້າກໍບໍ່ພໍຈະດື່ມ.
ແຕ່ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ—ນີ້ເປັນການປະກາດຂອງພຣະຢາເວ.”[9]ເຮົາໄດ້ໂຈມຕີພວກເຈົ້າດ້ວຍຫາຍະນະ
ແລະພະຍາດນາໆຊະນິດ. ສວນຫລາກຫລາຍຂອງພວກເຈົ້າ, ສວນອະງຸ່ນ, ສວນກົກຫມາກເດືອ, ແລະ ສວນກົກຫມາກກອກເທດ—
ຝູງຕັກແຕນໄດ້ມາທຳລາຍຜົນລະປູກຂອງພວກເຈົ້າຈົນຫມົດ. ແຕ່ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ—ນີ້ເປັນການປະກາດຂອງພຣະຢາເວ.
[10]ເຮົາໄດ້ສົ່ງໂລກລະບາດທີ່ເຄີຍເກີດຂຶ້ນໃນປະເທດເອຢິບມາຫາພວກເຈົ້າ. ເຮົາໄດ້ຂ້າຊາຍຫນຸ່ມຂອງພວກເຈົ້າດ້ວຍດາບ,
ເອົາມ້າຂອງພວກເຈົ້າໄປເສຍ, ແລະເຮົາເຮັດໃຫ້ຄ້າຍພັກຂອງພວກເຈົ້າເກີດກິ່ນເຫມັນ ເຂົ້າໃສ່ດັງຂອງພວກເຈົ້າ.
ແຕ່ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ—ນີ້ເປັນການປະກາດຂອງພຣະຢາເວ.[11]ເຮົາໄດ້ທຳລາຍເມືອງຕ່າງໆ ໃນທ່າມກາງພວກເຈົ້າ,
ເຫມືອນດັ່ງພຣະເຈົ້າໄດ້ທຳລາຍເມືອງໂຊໂດມແລະເມືອງໂກໂມຣາ. ພວກເຈົ້າປຽບເຫມືອນດົ້ນຟືນທີ່ລຸກໄຫມ້ຢູ່ ທີ່ຖືກດຶງອອກຈາກກອງໄຟ.
ແຕ່ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ—ນີ້ເປັນການປະກາດຂອງພຣະຢາເວ.
[12]ໂອ້ ອິດສະຣາເອນເອີຍ, ເຫດສະນັ້ນ ເຮົາຈະເຮັດບາງຢ່າງທີ່ຫນ້າຢ້ານກົວໃຫ້ແກ່ພວກເຈົ້າ;
ແລະເພາະເຮົາຈະເຮັດສິ່ງທີ່ຫນ້າຢ້ານກົວໃຫ້ພວກເຈົ້າ, ຈົ່ງຕຽມຕົວປະເຊີນຫນ້າກັບພຣະເຈົ້າຂອງພວກເຈົ້າ.[13]ເພາະເບິ່ງເຖີດ,
ພຣະອົງຜູ້ຊົງສ້າງພູທັງຫລາຍ ແລະຊົງສ້າງພາຍຸ, ຊົງເປີດເຜີຍຖ້ອຍຄຳຂອງພຣະອົງໃຫ້ແກ່ມະນຸດ, ຊົງປ່ຽນຕອນເຊົ້າໃຫ້ມືດໄປ,
ແລະຊົງຄອບຄອງຈາກບ່ອນສູງຂອງແຜ່ນດິນໂລກ. ພຣະນາມຂອງພຣະອົງຄື ພຣະຢາເວ ພຣະເຈົ້າຈອມໂຢທາ.”


generated on Tue Jun 17 19:01:42 2025

# 5

[1]ໂອ້ ເຊື້ອສາຍອິດສະຣາເອນເອີຍ! ຈົ່ງຟັງຄຳທີ່ເຮົາໄດ້ອາໄລເຖິງພວກເຈົ້າ.[2]ອິດສະຣາເອນທີ່ເປັນສາວປອດໄດ້ລົ້ມລົງ; ນາງຈະບໍ່ລຸກຂຶ້ນອີກ;
ນາງຖືກປະຖິ້ມເທິງແຜ່ນດິນຂອງນາງ; ບໍ່ມີຜູ້ໃດຊ່ອຍດຶງນາງຂຶ້ນ.

[3]ນີ້ເປັນສິ່ງທີ່ພຣະຢາເວ ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ: “ເມືອງທີ່ໄດ້ສົ່ງຄົນອອກໄປຫນຶ່ງພັນຄົນ ແຕ່ຈະມີພຽງຫນຶ່ງຮ້ອຍຄົນເທົ່ານັ້ນທີ່ກັບຄືນມາ
ແລະ ເມືອງທີ່ສົ່ງອອກໄປຫນຶ່ງຮ້ອຍຄົນ ກໍມີພຽງສິບຄົນເທົ່ານັ້ນທີ່ເປັນເຊື້ອສາຍຂອງອິດສະຣາເອນ.”
[4]ນີ້ເປັນສິ່ງທີ່ພຣະຢາເວຊົງກ່າວຕໍ່ພວກເຊື້ອສາຍອິດສະຣາເອນວ່າ: “ຈົ່ງສະແຫວງຫາເຮົາ ແລະມີຊີວິດຢູ່![5]ຢ່າສະແຫວງຫາທີ່ເບັດເອນ; ແລະ
ຢ່າເຂົ້າໄປໃນເມືອງກິນການ; ຢ່າເດີນທາງໄປເມືອງເບເອເຊບາ. ເພາະເມືອງກິນການຈະຕົກເປັນຊະເລີຍ, ແລະ ເມືອງເບັດເອນຈະດັບສູນໄປ.
[6]ຈົ່ງສະແຫວງຫາພຣະຢາເວ ແລະມີຊີວິດຢູ່, ຖ້າບໍ່ດັ່ງນັ້ນ ພຣະອົງຈະປົດປ່ອຍຄວາມໂກດຮ້າຍເຫມືອນໄຟເຜົາຜານໃນເຊື້ອສາຍຂອງໂຢເຊັບ.
ໄຟນັ້ນຈະລຸກໄຫມ້ໃນເບັດເອນ ແລະບໍ່ມີໃຜຈະມອດໄຟນັ້ນໄດ້.[7]ຜູ້ຄົນເຫລົ່ານັ້ນໄດ້ປ່ຽນຄວາມຍຸດຕິທຳໃຫ້ກາຍເປັນຄວາມຂົມຂື່ນ
ແລະໂຍນຄວາມຊອບທຳຖິ້ມລົງພື້ນດິນ!”
[8]ພຣະເຈົ້າໄດ້ຊົງສ້າງດວງດາວລູກໄກ່ ແລະດາວໄຖ; ພຣະອົງຊົງປ່ຽນຄວາມມືດທຶບໃຫ້ເປັນຄວາມສະຫວ່າງຮຸ່ງເຊົ້າ;
ພຣະອົງຊົງໃຫ້ກາງເວັນໃຫ້ມືດເປັນກາງຄືນ ແລ້ວຊົງເອີ້ນນ້ຳທັງຫລາຍແຫ່ງອອກມາຈາກທະເລ;
ພຣະອົງຊົງຖອກເທນ້ຳນັ້ນລົງເທິງແຜ່ນດິນໂລກ. ພຣະຢາເວຄືນາມຂອງພຣະອົງ![9]ພຣະອົງຊົງນຳຄວາມຈິບຫາຍມາເຫນືອຜູ້ແຂງແຮງໃນທັນທີ
ດັ່ງນັ້ນຄວາມຈິບຫາຍຈຶ່ງມາເຫນືອປ້ອມປາການທັງຫລາຍ.
[10]ພວກເຂົາໄດ້ກຽດຊັງທຸກຄົນທີ່ຕັກເຕືອນພວກເຂົາຢູ່ປະຕູເມືອງ, ແລະພວກເຂົາກຽດຊັງທຸກຄົນເວົ້າຄວາມຈິງ.
[11]ເພາະວ່າເຈົ້າໄດ້ຂົ່ມເຫັງຄົນທຸກຍາກ ແລະເອົາເຂົ້າບາເລຫລາຍສ່ວນໄປຈາກເຂົາ—ເຖິງວ່າພວກເຈົ້າໄດ້ສ້າງເຮືອນດ້ວຍຫີນອ່ອນ,
ເຈົ້າກໍຈະບໍ່ໄດ້ອາໃສຢູ່ໃນເຮືອນເຫລົ່ານັ້ນ. ພວກເຈົ້າມີສວນອະງຸ່ນ, ແຕ່ເຈົ້າຈະບໍ່ໄດ້ດື່ມເຫລົ້າອະງຸ່ນຈາກສວນນັ້ນ.
[12]ເພາະເຮົາຮູ້ຈັກວ່າການລະເມີດທັງຫລາຍຂອງພວກເຈົ້າມີເທົ່າໃດ ແລະຄວາມບາບທັງຫລາຍຂອງພວກເຈົ້າກໍຫລາຍເທົ່ານັ້ນ—
ເຈົ້າຂົ່ມເຫັງຄົນຊອບທຳ, ຮັບເງິນສິນບົນທັງຫລາຍ, ແລະຂັບໄລ່ຄົນທຸກຈົນອອກໄປທີ່ປະຕູເມືອງ.
[13]ເພາະສະນັ້ນໃຜທີ່ເປັນຄົນສະຫລາດຈະມິດງຽບຢູ່ໃນເວລານັ້ນ, ເພາະວ່ານັ້ນເປັນເວລາແຫ່ງຄາວຊົ່ວຮ້າຍ.
[14]ຈົ່ງສະແຫວງຄວາມດີ ແລະບໍ່ແມ່ນຄວາມຊົ່ວ, ເພື່ອເຈົ້າຈະໄດ້ມີຊີວິດຢູ່. ດັ່ງນັ້ນພຣະຢາເວພຣະເຈົ້າຈອມໂຍທາ,
ຈະສະຖິດຢູ່ກັບເຈົ້າຢ່າງແທ້ຈິງ, ດັ່ງທີ່ເຈົ້າໄດ້ກ່າວອ້າງເຖິງພຣະອົງ.[15]ຈົ່ງກຽດຊັງຄວາມຊົ່ວ, ຈົ່ງຮັກຄວາມດີ,
ຈົ່ງປາດຖະຫນາຄວາມຍຸດຕິທຳຢູ່ທີ່ປະຕູເມືອງ. ບາງເທື່ອພຣະຢາເວພຣະເຈົ້າຈອມໂຍທາ, ຈະຊົງເມດຕາເຊື້ອສາຍຂອງໂຢເຊັບທີ່ຍັງເຫລືອ.
[16]ດັ່ງນັ້ນ, ນີ້ເປັນສິ່ງທີ່ພຣະຢາເວພຣະເຈົ້າຈອມໂຍທາອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, “ການໂສກເສົ້າຮ້ອງໄຫ້ຈະມີຢູ່ໃນລານເມືອງທັງຫມົດ
ແລະພວກເຂົາຈະກ່າວຕາມຖະຫນົນທຸກເສັ້ນໃນເມືອງວ່າ 'ວິບັດ! ວິບັດ!' ພວກເຂົາຈະເອີ້ນພວກຊາວນາໃຫ້ໄວ້ທຸກ ແລະ
ຄະນະນັກຮ້ອງເພງໄວ້ທຸກຮ້ອງໃຫ້ໂສກເສົ້າ.[17]ໃນສວນອະງຸ່ນທັງຫມົດຈະມີການຮ້ອງໄຫ້ໂສກເສົ້າ, ເພາະວ່າເຮົາຈະຜ່ານໄປທ່າມກາງເຈົ້າ”
ພຣະຢາເວຊົງກ່າວໄວ້ດັ່ງນີ້ແຫລະ.
[18]ວິບັດແກ່ຜູ້ປາດຖະຫນາວັນແຫ່ງພຣະຢາເວ! ເປັນຫຍັງພວກເຈົ້າຈຶ່ງປາດຖະຫນາວັນແຫ່ງພຣະຢາເວ? ວັນນັ້ນຈະເປັນມື້ແຫ່ງຄວາມມືດ
ແລະບໍ່ແມ່ນຄວາມສະຫວ່າງ,[19]ເຫມືອນດັ່ງຄົນຫນຶ່ງທີ່ແລ່ນປົບຈາກສິງ ແຕ່ພົບຫມີ, ຫລືເຫມືອນເຂົາເຂົ້າໄປໃນເຮືອນ ແລະເອົາມືຂົ້ມຝາເຮືອນ
ແລ້ວຖືກງູກັດເຂົາ.[20]ມື້ແຫ່ງພຣະຢາເວຈະເປັນຄວາມມືດ ບໍ່ແມ່ນຄວາມສະຫວ່າງແມ່ນຫລືບໍ? ເປັນຄວາມມືດຕື້ມ ແລະ ບໍ່ແຈ່ມໃນບໍ່ແມ່ນຫລື?
[21]"ເຮົາກຽດຊັງ, ເຮົາຫມິ່ນປະຫມາດເທດສະການທັງຫລາຍຂອງພວກເຈົ້າ, ເຮົາບໍ່ຍິນດີກັບການປະຊຸມຕາມພິທີທັງຫລາຍຂອງພວກເຈົ້າ.
[22]ເຖິງແມ່ນພວກເຈົ້ານຳເຄື່ອງເຜົາບູຊາ, ແລະຜົນລະປູກມາຖວາຍໃຫ້ແກ່ເຮົາ, ເຮົາຈະບໍ່ຍອມຮັບເອົາຂອງຖວາຍເຫລົ່ານັ້ນ,
ແລະເຮົາຈະບໍ່ຫລຽວເບິ່ງການຖວາຍເຄື່ອງຖວາຍບູຊາດ້ວຍສັດຕ່າງໆ ທີ່ອ້ວນພີຂອງພວກເຈົ້າ.
[23]ຈົ່ງເອົາສຽງບົດເພັງທັງຫລາຍຂອງເຈົ້າອອກປຈາກເຮົາ; ເຮົາຈະບໍ່ຟັງສຽງຈາກພິນໃຫຍ່ຂອງເຈົ້າ.[24]ແຕ່ຈົ່ງໃຫ້ຄວາມຍຸດຕິທຳໄຫລໄປດັ່ງນ້ຳ,
ແລະຄວາມຊອບທຳເຫມືອນດັ່ງແມ່ນ້ຳທີ່ໄຫລຢູ່ຕະລອດ ໂອ້ ເຊື້ອສາຍອິດສະຣາເອນເອີຍ.
[25]ເຈົ້າໄດ້ນຳເອົາບັນດາເຄື່ອງຖວາຍບູຊາທັງຫລາຍມາຖວາຍແກ່ເຮົາໃນຖິ່ນແຫ້ງແລ້ງກັນດານ ເປັນເວລາສີ່ສິບປີ, ເຊື້ອສາຍອິດສະຣາເອນເອີຍ?
[26]ເຈົ້າຈະຍົກຮູບເຄົາລົບພະສັດກຸດ ໃຫ້ເປັນດັ່ງກະສັດຂອງພວກເຈົ້າ, ແລະພະໄກວັນ, ພະແຫ່ງດວງດາວຂອງເຈົ້າ—
ຮູບເຄົາລົບທັງຫລາຍທີ່ເຈົ້າໄດ້ສ້າງຂຶ້ນສຳລັບຕົນເອງ.
[27]ເພາະສະນັ້ນ ເຮົາຈະຂັບໄລ່ພວກເຈົ້າອອກໄປໄກກວ່າເມືອງດາມາເຊ,” ພຣະຢາເວ,
ຜູ້ຊົງພຣະນາມວ່າພຣະເຈົ້າຈອມໂຍທາຊົງກ່າວໄວ້ດັ່ງນີ້ແຫລະ.


generated on Tue Jun 17 19:01:42 2025

6 [1]ວິບັດແກ່ບັນດາຜູ້ທີ່ຢູ່ຢ່າງສະບາຍໃນຊີໂອນ, ແລະແກ່ບັນດາຜູ້ປອດໄພໃນດິນແດນພູເຂົາຊາມາເຣຍ,
ບັນດາຄົນທີ່ມີຊື່ສຽງໂດດເດັ່ນຂອງປະຊາຊາດ, ທີ່ເຊື້ອສາຍຂອງອິດສະຣາເອນໄດ້ມາຂໍຄວາມຊ່ອຍເຫລືອ![2]ພວກຜູ້ນຳຂອງເຈົ້າເວົ້າວ່າ,
"ຈົ່ງໄປເມືອງການເນ ແລະເບິ່ງເອົາເທີ້ນ; ຈາກບ່ອນນັ້ນກໍໄປເມືອງຮາມາດ, ຊຶ່ງເປັນເມືອງໃຫຍ່; ແລ້ວລົງໄປໃນເມືອງກັດຂອງຄົນຟີລິດສະຕິນ.
ພວກເຂົາດີກວ່າຣາຊະອານາຈັກທັງສອງຂອງພວກເຈົ້າບໍ?
ອານາເຂດແດນຂອງເມືອງເຫລົ່ານັ້ນກວ້າງກວ່າອານາເຂດແດນຂອງເມືອງພວກເຈົ້າບໍ?

[3]ວິບັດແກ່ພວກເຂົາຜູ້ເອົາມື້ແຫ່ງຄວາມພິນາດອອກໄປ ແຕ່ເຮັດໃຫ້ບັນລັງແຫ່ງຄວາມຮຸນແຮງເຂົ້າມາໃກ້.
[4]ພວກເຂົານອນເທິງຕຽງທີ່ຕົກແຕ່ງດ້ວຍງາຊ້າງທັງຫລາຍ ແລະນອນຢຽດກາຍຢູ່ເທິງບ່ອນນອນຂອງພວກເຂົາ.
ພວກເຂົາກິນພວກລູກແກະຈາກຝູງ ແລະລູກງົວຈາກຄອກງົວ.
[5]ພວກເຂົາມັກຮ້ອງເພງໂງ່ຈ້າປະສານກັບນສຽງພິນໃຫຍ່; ພວກເຂົາໃຊ້ເຄື່ອງດົນຕີແຕ່ງເພງເຫມືອນດາວິດເຄີຍເຮັດ.
[6]ພວກເຂົາດື່ມເຫລົ້າອະງຸ່ນຈາກຖ້ວຍ ແລະ ທານ້ຳມັນຫອມຢ່າງດີໃສ່ຕົນເອງ,
ແຕ່ພວກເຂົາບໍ່ໄດ້ໂສກເສົ້າເສຍໃຈຕໍ່ຄວາມຈິບຫາຍຂອງໂຢເຊັບເລີຍ.
[7]ດັ່ງນັ້ນ ບັດນີ້ພວກເຂົາຈະເປັນຕົກໄປເປັນຊະເລີຍ ພ້ອມກັບພວກຊະເລີຍກຸ່ມທຳອິດ,
ແລະສ່ວນການກິນລ້ຽງທັງຫລາຍຂອງບັນດາຄົນທີ່ນັ່ງອ້ອມຮອບ ຈະບໍ່ມີອີກຕໍ່ໄປ.[8]"ເຮົາ,
ຄືພຣະຢາເວອົງພຣະຜູ້ເປັນເຈົ້າຊົງສາບານໄວ້ດ້ວຍຕົວເຮົາເອງ—ນີ້ເປັນການປະກາດຂອງພຣະຢາເວອົງພຣະຜູ້ເປັນ ເຈົ້າພຣະເຈົ້າຈອມໂຍທາ,
ເຮົາກຽດຊັງຄວາມຈອງຫອງຂອງຢາໂຄບ; ກຽດຊັງປ້ອມປາການທັງຫລາຍຂອງພວກເຂົາ. ເພາະສະນັ້ນ,
ເຮົາຈະມອບເມືອງນັ້ນພ້ອມກັບທຸກສິ່ງທີ່ຢູ່ໃນເມືອງນັ້ນແກ່ສັດຕູ."
[9]ຕໍ່ມາຖ້າມີສິບຄົນເຫລືອຢູ່ໃນເຮືອນຫລັງຫນຶ່ງ, ພວກເຂົາກໍຈະຕາຍທັງຫມົດ.[10]ເມື່ອພີ່ນ້ອງຂອງຄົນຫນຶ່ງມາເອົາສົບຂອງພວກເຂົາ—
ຊຶ່ງເປັນຜູ້ທີ່ຈະຈູດສົບພວກເຂົາ ຫລັງຈາກທີ່ໄດ້ຫາມສົບເຫລົ່ານັ້ນອອກໄປຈາກເຮືອນນັ້ນແລ້ວ—ຖ້າເຂົາໄດ້ເວົ້າກັບຄົນໃນເຮືອນວ່າ,
“ມີໃຜຢູ່ກັບເຈົ້າອີກບໍ?” ຖ້າຄົນນັ້ນຕອບວ່າ, “ບໍ່ມີ” ແລ້ວເຂົາກໍຈະບອກວ່າ, “ຈົ່ງມິດງຽບ, ເພາະເຮົາຕ້ອງບໍ່ເອີ່ຍພຣະນາມຂອງພຣະຢາເວ.”
[11]ເພາະເບິ່ງແມ, ພຣະຢາເວຈະອອກຄຳສັ່ງ ແລະເຮືອນຫລັງໃຫຍ່ຈະຖືກທຸບແຕກເປັນກ້ອນນ້ອຍໆ, ແລະເຮືອນຫລັງນ້ອຍຈະແຕກເປັນທ່ອນໆ.
[12]ພວກມ້າແລ່ນເທິງຫນ້າຜາໄດ້ບໍ? ມີໃຜຈະເອົາງົວໄປໄຖທີ່ນັ້ນບໍ? ແຕ່ພວກເຈົ້າໄດ້ປ່ຽນຄວາມຍຸດຕິທຳໃຫ້ກາຍເປັນຢາພິດ ແລະ
ປ່ຽນຜົນຂອງຄວາມຊອບທຳໃຫ້ກາຍເປັນຄວາມຂົມຂື່ນ.[13]ພວກເຈົ້າຜູ້ຍິນດີເຫນືອເມືອງໂລເດບາ, ຜູ້ທີ່ກ່າວວ່າວ່າ, “ເຮົາຍຶດເມືອງການາຢິມ
ໄດ້ດ້ວຍກຳລັງຂອງພວກເຮົາເອງບໍ່ແມ່ນຫລື?”
[14]"ແຕ່ເບິ່ງເທີ້ນ, ເຊື້ອສາຍອິດສະຣາເອນເອີຍ, ເຮົາຈະຍົກຊົນຊາດຫນຶ່ງຂຶ້ນຕໍ່ສູ້ພວກເຈົ້າ—
ນີ້ເປັນການປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ. ພວກເຂົາຈະໂຈມຕີພວກເຈົ້າຈາກເລໂບຮາມັດ
ໄປຈົນຮອດແມ່ນ້ຳຮຳມາດ.”


generated on Tue Jun 17 19:01:42 2025

7 [1]ພຣະຢາເວອົງພຣະຜູ້ເປັນເຈົ້າ ໄດ້ຊົງສະແດງໃຫ້ຂ້ານ້ອຍດັ່ງນີ້. ເບິ່ງເທີ້ນ,
ພຣະອົງໄດ້ຊົງສ້າງຝູງຕັກແຕນເມື່ອຕອນທີ່ພືດກຳລັງປົ່ງໃຫມ່ຂຶ້ນມາ, ເປັນພືດລຸ້ນຫລັງຈາກການເກັບກ່ຽວສ່ວນຂອງກະສັດແລ້ວ.
[2]ເມື່ອຝູງຕັກແຕນໄດ້ກິນພືດຈາກແຜ່ນດິນຈົນຫມົດສິ້ນ, ແລ້ວຂ້າພະເຈົ້າຈຶ່ງເວົ້າວ່າ, “ພຣະຢາເວ ອົງພຣະຜູ້ເປັນເຈົ້າ, ຂໍຊົງໂຜດອະໄພແດ່ທ້ອນ
ຢາໂຄບຈະຢູ່ລອດໄດ້ຢ່າງໃດ? ເພາະວ່າພວກເຂົາເປັນພຽງແຕ່ຜູ້ເລັກນ້ອຍ.”[3]ພຣະຢາເວ ຊົງຍອມຜ່ອນໂທດໃນເລື່ອງນີ້. ພຣະອົງຊົງກ່າວວ່າ,
“ຈະບໍ່ເກີດຂຶ້ນຕາມນັ້ນ.”

[4]ພຣະຢາເວໄດ້ຊົງສະແດງໃຫ້ຂ້ານ້ອຍຢ່າງນີ້: ເບິ່ງເທີ້ນ, ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ຊົງເອີ້ນໄຟມາໃຫ້ມາລົງໂທດ.
ໄຟໄດ້ໃຫ້ນ້ຳມະຫາສານທີ່ຢູ່ເລິກພາຍໃຕ້ແຜ່ນດິນຫືດແຫ້ງໄປ, ແລະ ໄດ້ເຜົາໄຫມ້ແຜ່ນດິນ, ນຳອີກ.[5]ແຕ່ຂ້ານ້ອຍໄດ້ເວົ້າວ່າ,
“ພຣະຢາເວອົງພຣະຜູ້ເປັນເຈົ້າ, ຂໍຊົງໂຜດຢຸດຕິລົງເທີ້ນ; ຢາໂຄບຈະຢູ່ລອດໄດ້ຢ່າງໃດ?
ເພາະວ່າພວກເຂົາເປັນພຽງແຕ່ຜູ້ເລັກນ້ອຍ.”[6]ພຣະຢາເວກໍຊົງຍອມຜ່ອນໂທດໃນເລື່ອງນີ້, ພຣະຢາເວອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວວ່າ,
"ຈະບໍ່ເກີດຂຶ້ນຕາມນັ້ນ.”
[7]ພຣະອົງໄດ້ຊົງສະແດງໃຫ້ຂ້ານ້ອຍຢ່າງນີ້: ເບິ່ງເທີ້ນ, ອົງພຣະຜູ້ເປັນເຈົ້າ ໄດ້ຊົງຢືນຢູ່ຂ້າງກຳແພງ
ພ້ອມກັບຖືເຊືອກເນັ່ງເສັ້ນຫນຶ່ງໃນພຣະຫັດຂອງພຣະອົງ.[8]ພຣະຢາເວຊົງກ່າວແກ່ຂ້ານ້ອຍວ່າ, “ອາໂມດເອີຍ, ເຈົ້າເຫັນຫຍັງແດ່?”
ຂ້ານ້ອຍຕອບວ່າ, “ເຫັນເຊືອກເນັ່ງເສັ້ນຫນຶ່ງ.” ແລ້ວອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເບິ່ງເທີ້ນ,
ເຮົາຈະໃຊ້ເຊືອກເນັ່ງວັດແທກທ່າມກາງປະຊາຊົນອິດສະຣາເອນ. ເຮົາຈະບໍ່ອົດກັ້ນກັບພວກເຂົາອີກຕໍ່ໄປ.
[9]ສະຖານທີ່ສູງທັງຫລາຍຂອງອີຊາກຈະຖືກທຳລາຍລົງ, ສະຖານທີ່ນະມັດສະການທັງຫລາຍຂອງອິດສະຣາເອນຈະເພພັງລົງ,
ແລະເຮົາຈະຍົກດາບຂຶ້ນຕໍ່ສູ້ເຊື້ອສາຍຂອງກະສັດເຢໂຣໂບອາມ.”
[10]ແລ້ວອາມາຊີຢາຜູ້ເປັນປະໂລຫິດຂອງເບັດເອນ, ໄດ້ສົ່ງຂໍ້ຄວາມເຖິງເຢໂຣໂບອາມ, ກະສັດແຫ່ງອິດສະຣາເອນ ຊາບວ່າ:
“ອາໂມດໄດ້ຄິດແຜນກະບົດຕໍ່ພຣະອົງໃນທ່າມກາງເຊື້ອສາຍຂອງອິດສະຣາເອນ. ແຜ່ນດິນທົນຮັບຖ້ອຍຄຳຂອງເຮົາບໍ່ໄດ້.
[11]ເພາະອາໂມດໄດ້ເວົ້າວ່າ, 'ເຢໂຣໂບອາມຈະຕ້ອງຕາຍຢູ່ດ້ວຍຄົມດາບ,
ແລະອິດສະຣາເອນຈະຕົກເປັນຊະເລີຍໄກຈາກແຜ່ນດິນຂອງຕົນຢ່າງແນ່ນອນ.”"
[12]ອາມາຊີຢາໄດ້ເວົ້າກັບອາໂມດວ່າ, “ທ່ານຜູ້ທຳນວາຍເອີຍ, ຈົ່ງໄປສາ, ຈົ່ງແລ່ນກັບໄປຫາແຜ່ນດິນຢູດາ, ແລະໄປຫາກິນອາຫານ
ແລະປະກາດພຣະທຳຢູ່ທີ່ນັ້ນສາ.[13]ແຕ່ຢ່າມາປະກາດພຣະທຳຢູ່ທີ່ເມືອງເບັດເອນນີ້ອີກຕໍ່ໄປ, ເພາະນີ້ເປັນສະຖານທີ່ນະມັດສະການຂອງກະສັດ
ແລະເປັນພຣະຣາຊະວັງຂອງກະສັດ.”
[14]ແລ້ວອາໂມດຈຶ່ງຕອບອາມາຊີຢາວ່າ, “ຂ້ານ້ອຍບໍ່ແມ່ນຜູ້ປະກາດພຣະທຳ ຫລືລູກຊາຍຂອງຜູ້ປະກາດພຣະທຳ.
ຂ້ານ້ອຍເປັນພຽງຄົນລ້ຽງສັດຄົນຫນຶ່ງ, ແລະ ຂ້ານ້ອຍເບິ່ງແຍງສວນຫມາກເດື່ອເທດ.
[15]ແຕ່ພຣະຢາເວໄດ້ນຳຂ້ານ້ອຍອອກມາຈາກການລ້ຽງຝູງສັດ ແລະຊົງກ່າວແກ່ຂ້ານ້ອຍວ່າ, 'ຈົ່ງໄປ,
ຈົ່ງປະກາດພຣະທຳແກ່ອິດສະຣາເອນໄພ່ພົນຂອງເຮົາ.'
[16]ບັດນີ້ ຈົ່ງຟັງພຣະຄຳຂອງພຣະຢາເວ. ທ່ານກ່າວວ່າ, 'ຢ່າປະກາດພຣະທຳຕໍ່ສູ້ພວກອິດສະຣາເອນ,
ແລະຢ່າກ່າວໂທດໃສ່ເຊື້ອສາຍອີຊາກ.'[17]ດ້ວຍເຫດນັ້ນ ພຣະຢາເວຈຶ່ງຊົງກ່າວດັ່ງນີ້ວ່າ, 'ເມຍຂອງທ່ານຈະເປັນໂສເພນີໃນເມືອງນີ້;
ລູກຊາຍແລະລູກຍິງທັງຫລາຍຂອງເຈົ້າຈະຖືກຂ້າດ້ວຍຄົມດາບ; ແຜ່ນດິນຂອງເຈົ້າຈະຖືກວັດແທກ ແລະແບ່ງປັນໃຫ້ຄົນອື່ນ;
ເຈົ້າຈະຕາຍຢູ່ໃນດິນແດນຂອງຄົນນອກສາດສະຫນາ,
ແລະອິດສະຣາເອນຈະຕົກເປັນຊະເລີຍຢູ່ດິນແດນຫ່າງໄກຈາກແຜ່ນດິນຂອງຕົນຢ່າງແນ່ນອນ.'”

8 [1]ພຣະຢາເວໄດ້ຊົງສະແດງໃຫ້ແກ່ຂ້ານ້ອຍດັ່ງນີ້: ເບິ່ງເຫີ້ນ, ມີກະຕ່າຫມາກໄມ້ລະດູຮ້ອນຫນ່ວຍຫນຶ່ງ.[2]ພຣະອົງໄດ້ຊົງກ່າວວ່າ,
“ອາໂມດເອີຍ, ເຈົ້າໄດ້ເຫັນຫຍັງແດ່?” ຂ້ານ້ອຍຕອບວ່າ, “ກະຕ່າຫມາກໄມ້ລະດູຮ້ອນຫນ່ວຍຫນຶ່ງ.” ແລ້ວພຣະຢາເວຊົງກ່າວຂ້ານ້ອຍວ່າ,
“ມື້ສຸດທ້າຍຂອງປະຊາຊົນອິດສະຣາເອນຂອງເຮົາມາຮອດແລ້ວ; ເຮົາຈະບໍ່ຮັກສາພວກເຂົາໄວ້ອີກຕໍ່ໄປ.
[3]ນີ້ເປັນຄຳປະກາດຂອງພຣະຢາເວມີດັ່ງນີ້—ໃນມື້ນັ້ນ ບົດເພງທັງຫລາຍໃນພຣະວິຫານຈະກາຍເປັນສຽງຮ້ອງໄຫ້ຄວນຄາງ, ໃນມື້ນັ້ນ
ຈະມີຊາກສົບຢູ່ທຸກບ່ອນ ພວກເຂົາຈະປິ່ງສົບຢ່າງງຽບໆ ໃນທຸກແຫ່ງ!”

[4]ຈົ່ງຟັງຖ້ອຍຄຳເຫລົ່ານີ້, ເຈົ້າຜູ້ຂົ່ມເຫັງຄົນຂັດສົນ ແລະ ຂັບໄລ່ຄົນທຸກຍາກອອກຈາກແຜ່ນດິນນີ້.[5]ພວກເຂົາເວົ້າວ່າ,
“ເມື່ອໃດຫນໍມື້ຂຶ້ນຫນຶ່ງຄໍ່າຈະຫມົດໄປ, ເພື່ອພວກເຮົາຈະໄດ້ຂາຍເຂົ້າອີກເທື່ອ? ເມື່ອໃດຫນໍວັນສະບາໂຕຈະກາຍໄປ
ເພື່ອເຮົາຈະໄດ້ຂາຍເຂົ້າບາເລ? ພວກເຮົາຈະເຮັດຖ້ວຍຕວງໃຫ້ນ້ອຍລົງແລະຂຶ້ນລາຄາ, ພວກເຮົາຈະໂກງຕາຊັ່ງ.
[6]ເພື່ອພວກເຮົາຈະຂາຍແກບເຂົ້າບາເລ, ຊື້ຄົນທຸກຍາກດ້ວຍເງິນ ແລະຊື້ຄົນຂັດສົນດ້ວຍເກີບຄູ່ຫນຶ່ງ.”
[7]ພຣະຢາເວໄດ້ຊົງກ່າວສາບານດ້ວຍກຽດສັກສີຂອງຢາໂຄບວ່າ,
“ເຮົາຈະບໍ່ລືມການກະທຳອັນຊົ່ວຊ້າຂອງພວກເຂົາຢ່າງແນ່ນອນ.”[8]ແຜ່ນດິນຈະບໍ່ສະທ້ານຫວັ່ນໄຫວເພາະສິ່ງເຫລົ່ານີ້ຫລື,
ແລະທຸກຄົນທີ່ຢູ່ເທິງແຜນດິນນັ້ນຈະບໍ່ໂສກເສົ້າຫລື? ແຜ່ນດິນທັງຫມົດກໍຈະຍົກຂຶ້ນເຫມືອນແມ່ນ້ຳໄນ, ແລະຈະຖືກຊັດໄປຊັດມາ
ແລະຈົມລົງອີກຄັ້ງ, ເຫມືອນແມ່ນ້ຳຂອງເອຢິບ.
[9]"ວັນນັ້ນຈະມາເຖິງ—ນີ້ເປັນການປະກາດຂອງພຣະຢາເວ ອົງພຣະຜູ້ເປັນເຈົ້າ—ຄືວັນທີ່ເຮົາຈະເຮັດໃຫ້ຕາເວັນຕົກໃນຕອນທ່ຽງ,
ແລະເຮົາຈະເຮັດໃຫ້ແຜ່ນໂລກມືດໄປໃນເວລາກາງເວັນ.[10]ເຮົາຈະເຮັດໃຫ້ເທດສະການທັງຫລາຍຂອງເຈົ້າກາຍເປັນໄຫວ້ອາໄລ
ແລະບົດເພງທັງຫລາຍກາຍເປັນສຽງໂສກເສົ້າຮ້ອງໄຫ້ຄວນຄາງ. ເຮົາຈະເຮັດໃຫ້ພວກເຈົ້າທັງຫລາຍນຸ່ງເຄື່ອງຜ້າປ່ານຫຍາບ
ແລະແຖຫົວທຸກຫົວ. ເຮົາຈະເຮັດໃຫ້ເປັນເຫມືອນການໄຫວ້ອາໄລໃຫ້ແກ່ລູກຊາຍໂທນທີ່ຕາຍໄປນັ້ນ ແລະຂົມຂື່ນໄປຈົນເຖິງວາລະສຸດທ້າຍ.
[11]ເບິ່ງເທີ້ນ, ວັນເຫລົ່ານັ້ນກຳລັງມາເຖິງ—ນີ້ເປັນຄຳປະກາດຂອງພຣະຢາເວອົງພຣະຜູ້ເປັນເຈົ້າ—ເມື່ອເຮົາຈະສົ່ງການອຶດຢາກມາໃນແຜ່ນດິນ,
ຊຶ່ງບໍ່ແມ່ນການອຶດຢາກອາຫານ, ຫລືກະຫາຍນ້ຳ, ແຕ່ເປັນການອຶດຢາກທີ່ຈະໄດ້ຟັງພຣະຄຳຂອງພຣະຢາເວ.
[12]ພວກເຂົາຈະຍ່າງໂຊເຊໄປມາຈາກທະເລຫນຶ່ງໄປຫາອີກທະເລຫນຶ່ງ; ພວກເຂົາຈະແລ່ນຈາກທິດເຫນືອໄປທິດຕາເວັນອອກ
ເພື່ອສະແຫວງຫາພຣະຄຳຂອງພຣະຢາເວ, ແຕ່ພວກເຂົາຈະບໍ່ພົບ.
[13]ໃນວັນນັ້ນ ບັນດາສາວປອດທີ່ສວຍງາມ ແລະບັນດາຊາຍຫນຸ່ມທັງຫລາຍຈະອ່ອນເພຍຍ້ອນການຫິວນ້ຳ.
[14]ບັນດາຄົນທີ່ສາບານຕົນດ້ວຍຄວາມບາບແຫ່ງຊະມາເຣຍ, ພວກເຂົາຈະລົ້ມລົງ ແລະ ບໍ່ສາມາດລຸກຂຶ້ນໄດ້ອີກ.”

 generated on Tue Jun 17 19:01:42 2025

9 [1]ຂ້ານ້ອຍໄດ້ເຫັນອົງພຣະຜູ້ເປັນເຈົ້າຊົງຢືນຢູ່ຂ້າງແທ່ນບູຊາ, ແລະ ພຣະອົງຊົງກ່າວວ່າ, “ຈົ່ງທຸບຫົວເສົາທັງຫລາຍ
ເພື່ອຮາກຖານທັງຫລາຍຈະສັ່ນສະເທືອນ. ຈົ່ງທຸບມັນໃຫ້ເປັນປ່ຽງໆ, ແລະໃຫ້ຕົກໃສ່ຫົວຂອງພວກເຂົາທັງຫລາຍ,
ສ່ວນເຮົາຈະມອບຄົນສຸດທ້າຍຂອງພວກເຂົາດ້ວຍຄົມດາບ. ບໍ່ມີໃຜຈັກຄົນຂອງພວກເຂົາທີ່ຫລົບຫນີໄປໄດ້.
[2]ເຖິງວ່າພວກເຂົາຈະຂຸດລົງໄປສູ່ແດນຄົນຕາຍ, ມືຂອງເຮົາກໍດຶງພວກເຂົາຂຶ້ນມາຈາກທີ່ນັ້ນ. ຖ້າພວກເຂົາປີນຂຶ້ນເຖິງຟ້າສະຫວັນ,
ເຮົາກໍຈະດຶງພວກເຂົາລົງມາຈາກບ່ອນນັ້ນ.

[3]ຖ້າວ່າພວກເຂົາຈະລີ້ຢູ່ເທິງຍອດພູກາເມນ, ເຮົາກໍຈະຊອກຫາ ແລະຈັບເອົາພວກເຂົາມາຈາກທີ່ນັ້ນ. ຖ້າວ່າພວກເຂົາລີ້ຢູ່ໃຕ້ພື້ນນ້ຳທະເລ
ເພື່ອໃຫ້ພົ້ນຈາກສາຍຕາຂອງເຮົາ, ເຮົາກໍຈະສັ່ງງູຮ້າຍ ແລະມັນກໍຈະກັດພວກເຂົາ.[4]ຖ້າພວກເຂົາຕົກໄປເປັນຊະເລີຍ,
ຖືກຂັບໄລ່ໂດຍສັດຕູຂອງພວກເຂົາ, ເຮົາກໍຈະສັ່ງໃຫ້ສັດຕູຂ້າພວກເຂົາຢູ່ຕໍ່ຫນ້າພວກເຂົາ. ເຮົາຈະເຝົ້າເບິ່ງພວກເຂົາດ້ວຍສາຍຕາຮ້າຍ ແລະ
ບໍ່ແມ່ນດ້ວຍສາຍຕາດີ.”
[5]ພຣະຢາເວອົງພຣະຜູ້ເປັນເຈົ້າຈອມໂຍທາ ຊົງໄດ້ແຕະຕ້ອງແຜ່ນດິນ ແລະ ມັນກໍສະລາຍໄປ; ທຸກຄົນທີ່ອາໄສຢູ່ທີ່ນັ້ນກໍໂສກເສົ້າເສຍໃຈ;
ແຜ່ນດິນທັງຫມົດຈະຖືກຍົກຂຶ້ນເຫມືອນແມ່ນ້ຳ ແລະຈະຖືກຈົມລົງອີກຄັ້ງເຫມືອນແມ່ນ້ຳແຫ່ງເອຢິບ.
[6]ເພາະພຣະອົງຜູ້ຊົງສ້າງຂັ້ນໄດຂອງພຣະອົງເທິງຟ້າສະຫວັນ, ແລະ ໄດ້ຊົງຕັ້ງຟ້າຂອງພຣະອົງກວມແຜ່ນດິນໂລກໄວ້.
ພຣະອົງຊົງເອີ້ນເອົານ້ຳຫລາຍແຫ່ງທະເລມາ, ແລະຖອກນ້ຳນັ້ນລົງເທິງແຜ່ນດິນໂລກ, ພຣະນາມຂອງພຣະອົງຄືພຣະຢາເວ.
[7]“ໂອ ຄົນອິດສະຣາເອນເອີຍ, ສຳລັບເຮົາແລ້ວ ພວກເຈົ້າເປັນເຫມືອນຄົນເອທີໂອເປຍບໍ່ແມ່ນຫລື?—ພຣະຢາເວໄດ້ຊົງປະກາດດັ່ງນີ້ແຫລະ.
ເຮົາໄດ້ນຳອິດສະຣາເອນອອກຈາກແຜ່ນດິນເອຢິບ, ແລະພາພວກຟີລິດສະຕິນມາຈາກເມືອງກະເຣເຕ,
ແລະພາຄົນອາຣາມຽນມາຈາກເມືອງກີຣະບໍ່ແມ່ນຫລື?[8]ເບິ່ງແມ, ພຣະຢາເວອົງພຣະຜູ້ເປັນເຈົ້າ
ກຳລັງທອດພຣະເນດເຫນືອອານາຈັກທີ່ເຕັມໄປດ້ວຍຄວາມບາບ, ແລະ ເຮົາຈະທຳລາຍເມືອງນັ້ນຈາກແຜ່ນດິນໂລກ,
ເວັ້ນແຕ່ເຊື້ອສາຍຂອງຢາໂຄບເຮົາຈະບໍ່ທຳລາຍໃຫ້ຫມົດໃນເທື່ອດຽວ—ນີ້ເປັນການປະກາດຂອງພຣະຢາເວ.
[9]ເບິ່ງແມ, ເຮົາຈະອອກຄຳສັ່ງ ແລະເຮົາຈະສັ່ນສະເທືອນເຊື້ອສາຍຂອງອິດສະຣາເອນໃນທ່າມກາງປະຊາຊາດທັງຫມົດ
ເຫມືອນການຮ່ອນເຂົ້າຢູ່ໃນກະດົ້ງ, ເພື່ອຈະບໍ່ໃຫ້ເມັດທີ່ນ້ອຍໆຫລຸດຕົກລົງພື້ນດິນ.
[10]ບັນດາຜູ້ທີ່ເຮັດຜິດບາບທັງຫລາຍຂອງປະຊາຊົນຂອງເຮົາຈະຖືກຂ້າດ້ວຍຄົມດາບ, 'ຄວາມຈິບຫາຍຈະມາບໍ່ເຖິງເຮົາ ຫລືຈະບໍ່ພົບພວກເຮົາ'.
[11]ໃນວັນນັ້ນ ເຮົາຈະຍົກເຕັນຂອງດາວິດທີ່ລົ້ມລົງຂຶ້ນໃຫມ່, ແລະປົວແປງບ່ອນທີ່ເພພັງທັງຫລາຍ. ເຮົາຈະແປງຊາກຫັກເພພັງນັ້ນຂຶ້ນ, ແລະ
ສ້າງຂຶ້ນໃຫມ່ໃຫ້ກັບສະພາບຄືໃນສະໄຫມກ່ອນ.[12]ເພື່ອພວກເຂົາຈະໄດ້ຄອບຄອງຄົນທີ່ຍັງເຫລືອຢູ່ຂອງເອໂດມ,
ແລະປະຊາຊົນທັງປວງທີ່ຖືກເອີ້ນໂດຍນາມຂອງເຮົາ—ພຣະອົງຊົງເຮັດຢ່າງນີ້—ນີ້ເປັນຄຳປະກາດຂອງພຣະຢາເວ.
[13]ພຣະຢາເວຊົງປະກາດໄວ້ດັ່ງນີ້ວ່າ—ເບິ່ງແມ, ວັນເຫລົ່ານັ້ນຈະມາເຖິງ—ເມື່ອຄົນໄຖຈະທັນຄົນເກັບກ່ຽວ
ແລະຄົນທີ່ບີບນ້ຳອະງຸ່ນຈະທັນຄົນຫວ່ານພືດ. ພູເຂົາທັງຫລາຍຈະມີນ້ຳອະງຸ່ນຫວານຍ້ອຍລົງມາ,
ເຮົາຈະນຳປະຊາຊົນອິດສະຣາເອນອອກມາຈາກການເປັນຊະເລີຍ.
[14]ເຮົາຈະນຳອິດສະຣາເອນໄພ່ພົນຂອງເຮົາຄືນຈາກການເປັນຊະເລີຍ. ພວກເຂົາຈະສ້າງເມືອງທີ່ເພພັງນັ້ນຄືນໃຫມ່ ແລະ
ອາໄສຢູ່ໃນເມືອງເຫລົ່ານັ້ນ, ພວກເຂົາຈະປູກສວນອະງຸ່ນ ແລະ ດື່ມເຫລົ້າອະງຸ່ນຈາກສວນເຫລົ່ານັ້ນ, ແລະພວກເຂົາຈະເຮັດສວນຫມາກໄມ້
ແລະ ກິນຜົນລະປູກຈາກສວນນັ້ນ.[15]ເຮົາຈະຫວ່ານພວກເຂົາເທິງແຜ່ນດິນຂອງເຂົາ, ແລະພວກເຂົາຈະບໍ່ມີທາງຖືກຖອນຮາກເຫງົ້າ
ຈາກແຜ່ນດິນທີ່ເຮົາໄດ້ມອບໄວ້ໃຫ້ພວກເຂົາອີກຕໍ່ໄປ,” ພຣະຢາເວຂອງພວກເຈົ້າຊົງກ່າວໄວ້ດັ່ງນີ້ແຫລະ.

# ໂອບາດີຢາ

1 [1]ນິມິດຂອງ ໂອບາດີຢາ. ພຣະຢາເວອົງພຣະຜູ້ເປັນເຈົ້າກ່າວກ່ຽວກັບເອໂດມວ່າ: ພວກເຮົາໄດ້ຍິນຂ່າວຈາກພຣະຢາເວ ແລະ ທູດຜູ້
ຫນຶ່ງໄດ້ຖືກສົ່ງເຂົ້າໄປໃນທ່າມກາງປະຊາຊາດ ໃຫ້ກ່າວວ່າ, “ຈົ່ງລຸກຂຶ້ນ! ໃຫ້ພວກເຮົາລຸກຂຶ້ນເຮັດສົງຄາມຕໍ່ສູ້ກັບເອໂດມ!”[2]ເບິ່ງເຖີດ,
ເຮົາຈະເຮັດໃຫ້ເຈົ້າເລັກນ້ອຍໃນທ່າມກາງປະຊາຊາດ, ເຈົ້າຈະເປັນທີ່ຖືກຫມິ່ນປະຫມາດຢ່າງຫລາຍ.

[3]ຄວາມອວດອົ່ງໃນຫົວໃຈຂອງເຈົ້າຫລອກລວງເຈົ້າ, ເຈົ້າຜູ້ທີ່ອາໄສຢູ່ຕາມໂງ່ນຫີນ, ໃນທີ່ຢູ່ອາໄສທີ່ຢູ່ສູງຂອງເຈົ້າ;
ເຈົ້າຄຳນຶງໃນຫົວໃຈຂອງເຈົ້າວ່າ, "ໃຜສາມາດເອົາຂ້າພຣະເຈົ້າລົງມາສູ່ພື້ນດິນໄດ້?"[4]ເຖິງແມ່ນວ່າເຈົ້າບິນສູງເທົ່າກັບນົກອິນຊີ ແລະ
ແມ່ນແຕ່ຮັງຂອງເຈົ້າຢູ່ທ່າມກາງຫມູ່ດາວ, ຂ້າພຣະເຈົ້າຈະເອົາເຈົ້າລົງຈາກບ່ອນນັ້ນ, ພຣະຢາເວກ່າວດັ່ງນີ້.
[5]ຖ້າພວກໂຈນໄດ້ມາຫາເຈົ້າ, ຖ້າພວກໂຈນໄດ້ມາຕອນກາງຄືນ (ເຈົ້າຈະຈິບຫາຍຫລາຍເທົ່າໃດ), ພວກເຂົາຈະບໍ່ລັກເອົາພຽງພໍສຳລັບຕົນເອງບໍ?
ຖ້າຜູ້ເກັບຫມາກອະງຸ່ນມາຫາເຈົ້າ, ພວກເຂົາຈະບໍ່ປະເຫລືອໄວ້ແດ່ບໍ?[6]ເອຊາວຖືກປຸ້ນຊັບ, ແລະ ຊັບສົມບັດທີ່ເຊື່ອງໄວ້ຂອງລາວໄດ້ຖືກຄົ້ນອອກ
ມາຫລາຍເທົ່າໃດ!
[7]ເຫລົ່າພັນທະມິດຂອງເຈົ້າຈະຂັບໄລ່ທ່ານໄປຕາມທາງຂອງເຈົ້າຈົນເຖິງຊາຍແດນ. ພວກຄົນທີ່ຢູ່ຢ່າງສະຫງົບກັບເຈົ້າຈະຫລອກລວງເຈົ້າ, ແລະ
ເອົາຊະນະເຈົ້າ. ຜູ້ຄົນທີ່ກິນອາຫານຂອງເຈົ້າຈະວາງກັບດັກໄວ້ພາຍໃຕ້ເຈົ້າ. ບໍ່ມີຄວາມເຂົ້າໃຈໃນຕົວເຂົາເລີຍ.[8]"ພຣະຢາເວກ່າວວ່າ,
"ໃນວັນນັ້ນ" ຂ້າພຣະເຈົ້າຈະບໍ່ທຳລາຍພວກຄົນມີປັນຍາຈາກເອໂດມ ແລະ ຄວາມເຂົ້າໃຈອອກໄປຈາກພູເຂົາຂອງເອຊາວຫລື?"[9]ເຕມານເອີຍ,
ນັກຮົບຂອງເຈົ້າຈະທໍ້ໃຈ, ດັ່ງນັ້ນທຸກຄົນຈະຖືກຕັດອອກຈາກພູເຂົາເອຊາວໂດຍການຂ້າຕາຍ.
[10]ເພາະຄວາມຮຸນແຮງທີ່ໄດ້ເກີດຂຶ້ນຕໍ່ຢາໂຄບນ້ອງຊາຍຂອງເຈົ້າ, ທ່ານຖືກປົກຄຸມດ້ວຍຄວາມອາຍ, ແລະ ເຈົ້າຈະຖືກຕັດຂາດຕະຫລອດໄປ.
[11]ໃນມື້ນັ້ນເຈົ້າຢືນຢູ່ໄກໆ, ໃນມື້ທີ່ຄົນແປກຫນ້າເອົາຄວາມຮັ່ງມີຂອງອ້າຍຂອງນ້ອງເຈົ້າໄປ, ແລະ ຄົນຕ່າງຊາດເຂົ້າໄປໃນປະຕູເມືອງຂອງເຂົາ,
ແລະ ຈັບສະຫລາກເພື່ອແບ່ງນະຄອນ ເຢຣູຊາເລັມ, ເຈົ້າກໍເປັນເຫມືອນຫນຶ່ງໃນພວກເຂົາ.

12ເຈົ້າຢ່າເບິ່ງດ້ວຍຄວາມພໍໃຈໃນມື້ຂອງນ້ອງຊາຍຂອງເຈົ້າ, ໃນມື້ແຫ່ງເຄາະຮ້າຍຂອງລາວ, ແລະ ຢ່າດີໃຈເຫນືອຜູ້ຄົນຢູດາໃນມື້
ທີ່ພວກເຂົາຖືກທໍາລາຍ; ຢ່າເຢາະເຢີ້ຍໃນມື້ທີ່ພວກເຂົາທຸກຍາກ.13ຢ່າເຂົ້າໄປໃນປະຕູເມືອງແຫ່ງປະຊາຊົນຂອງເຮົາໃນມື້ແຫ່ງພັຍພິບັດຂອງພວກ
ເຂົາ; ຢ່າເບິ່ງຄວາມທຸກຍາກລໍາບາກຂອງພວກເຂົາ ໃນມື້ທີ່ພວກເຂົາໄດ້ຮັບຄວາມເດືອດຮ້ອນດ້ວຍຄວາມພໍໃຈ, ຢ່າປຸ້ນຊັບສິນຂອງ
ພວກເຂົາໃນມື້ທີ່ພວກເຂົາຖືກປະຣາໄຊ.14ຢ່າຢືນຂວາງໃນທາງແຍກ, ເພື່ອສະກັດກັ້ນຜູ້ທີ່ຫລົບຫນີຂອງເຂົາ ແລະ
ຢ່າສົ່ງກັບຜູ້ທີ່ລອດຊີວິດຂອງພວກເຂົາໃນມື້ແຫ່ງຄວາມທຸກຍາກ.
15ເພາະມື້ແຫ່ງພຣະຢາເວທີ່ມາເຫນືອປະຊາຊົນທັງຫມົດ, ໃກ້ເຂົ້າມາແລ້ວ. ເຈົ້າໄດ້ເຮັດໄວ້ແນວໃດ, ມັນກໍຈະເກີດຂຶ້ນກັບທ່ານແນວນັ້ນ;
ການກະທໍາຂອງເຈົ້າຈະກັບມາຕົກລົງຢູ່ເທິງຫົວຂອງເຈົ້າ.16ເພາະວ່າເມື່ອທ່ານໄດ້ດື່ມຢູ່ເທິງພູເຂົາສັກສິດຂອງເຮົາ, ດັ່ງນັ້ນ, ປະຊາຊາດທັງ
ປວງຈະດື່ມຢ່າງບໍ່ເຊົາຄືກັນ. ພວກເຂົາຈະດື່ມ ແລະ ກືນລົງໄປ ແລະ ຈະເປັນຢ່າງທີ່ບໍ່ເຄີຍເກີດຂຶ້ນມາກ່ອນ.
17ແຕ່ໃນພູເຂົາຊີໂອນຈະມີບັນດາຄົນທີ່ລອດຊີວິດມາ ແລະ ທີ່ນັ້ນຈະມີຄວາມບໍຣິສຸດ; ແລະ ເຊື້ອສາຍຂອງຢາໂຄບຈະປົກຄອງຊັບ
ສິນຂອງພວກເຂົາ.18ເຊື້ອສາຍຂອງຢາໂຄບຈະເປັນໄຟ, ແລະ ເຊື້ອສາຍຂອງໂຢເຊັບຈະເປັນແປວໄຟ, ແລະ
ເຊື້ອສາຍຂອງເອຊາວຈະເປັນເຟືອງເຂົ້າ, ໄຟ ແລະ ແປວໄຟຈະເຜົາຜານ ແລະກືນເຟືອງເຂົ້ານັ້ນ. ຈະບໍ່ເຫລືອຜູ້ລອດຊີວິດໃນເຊື້ອ
ສາຍຂອງເອຊາວເລີຍ, ເພາະວ່າພຣະຢາເວໄດ້ກ່າວໄວ້ແລ້ວ."
19ບັນດາຜູ້ຄົນທີ່ມາຈາກເນເກບຈະໄດ້ປົກຄອງພູເຂົາຂອງເອຊາວ ແລະ ບັນດາຄົນຂອງເຊຟາລາຈະໄດ້ປົກຄອງແຜ່ນດິນຟີລິດສະຕິນ.
ພວກເຂົາຈະປົກຄອງແຜ່ນດິນເອຟຣາອິມ ແລະ ແຜ່ນດິນຊາມາເຣັຽ; ແລະເບັນຢາມິນໄດ້ຈະປົກຄອງເມືອງກີເລອາດ.
20ພວກທີ່ຖືກເນລະເທດຈາກອິສະຣາເອນຈະໄດ້ປົກຄອງແຜ່ນດິນການາອານ ໄກຈົນເຖິງເມືອງ ເຊເຣຟັດ. ຜູ້ທີ່ຖືກເນລະເທດອອກຈາກນະຄອນ
ເຢຣູຊາເລັມ, ເຊິ່ງເປັນຜູ້ທີ່ຢູ່ເມືອງເສຟາຣາດ, ຈະໄດ້ປົກຄອງເມືອງຕ່າງໆຂອງ ເນເກບ.21ບັນດາຜູ້ຊ່ອຍກູ້ຈະຂຶ້ນໄປເທິງພູຊີໂອນ
ເພື່ອປົກຄອງພູເຂົາເອຊາວ, ແລະ ອານາຈັກຈະກາຍເປັນຂອງພຣະຢາເວ.

# ໂຢນາ

1 1ບັດນີ້ ພຣະທັມຂອງພຣະຢາເວມາເຖິງໂຢນາ ລູກຊາຍຂອງອາມິດໄຕ, ກ່າວວ່າ,2"ຈົ່ງລຸກຂຶ້ນ ແລະໄປທີ່ນີນາເວເມືອງຫລວງ,
ແລະໄປຕໍ່ຕ້ານພວກເຂົາ, ເພາະຄວາມຊົ່ວທີ່ພວກເຂົາເຮັດນັ້ນ
ໄດ້ປາກົດແກ່ພຣະຢາເວແລ້ວ."3ແຕ່ໂຢນາລຸກຫນີໄປໃຫ້ພົ້ນຫນ້າຂອງພຣະຢາເວ ແລະ ໄປທີ່ເມືອງຕາກຊິດ. ລາວລົງໄປຕໍ່ທີ່ເມືອງຢົບປາ
ແລະພົບເຮືອລໍາຫນຶ່ງທີ່ຈະໄປຍັງເມືອງຕາກຊິດ. ລາວຈຶ່ງຈ່າຍເງິນຄ່າໂດຍສານ ແລະຂຶ້ນເຮືອໄປກັບພວກເຂົາທີ່ເມືອງຕາກຊິດ,
ເພື່ອຫນີໄປໃຫ້ພົ້ນຫນ້າຂອງພຣະຢາເວ.

4ແຕ່ພຣະຢາເວສົ່ງລົມໃຫຍ່ຂຶ້ນໃນທະເລ ແລະຈົນກາຍເປັນລົມພາຍຸໃຫຍ່ໃນທະເລ. ຈົນເຮືອໃກ້ຈົມລົງເຕັມທີ.5ພວກລູກເຮືອກໍຢ້ານ ແລະ
ແຕ່ລະຄົນຕ່າງກໍຮ້ອງຫາພຣະເຈົ້າຂອງຕົນໃຫ້ຊ່ວຍເຫລືອ. ພວກເຂົາທັງຫລາຍກໍຖິ້ມສິ່ງຂອງລົງໃນທະເລ. ເພື່ອເຮັດໃຫ້ເຮືອເບົາຂຶ້ນ.
ແຕ່ໂຢນາກັບໄປໃນເຮືອ, ແລະລາວໄດ້ນອນຫລັບສະຫນິດ.
6ດັ່ງນັ້ນນາຍເຮືອໄດ້ມາຫາລາວ ແລະ ກ່າວວ່າ, "ເປັນຫຍັງເຈົ້າຈຶ່ງຍັງນອນຢູ່? ລຸກຂຶ້ນ! ຈົ່ງຮ້ອງຫາພຣະເຈົ້າຂອງເຈົ້າ!
ເພື່ອວ່າພຣະເຈົ້າຈະຟັງພວກເຮົາ ແລະພວກເຮົາຈະບໍ່ຖືກລົງໂທດ."7ພວກເຂົາທັງຫລາຍໄດ້ເວົ້າກັນວ່າ, "ມາແມ, ໃຫ້ພວກເຮົາຈັບສະຫລາກ,
ເພື່ອວ່າຈະໄດ້ຮູ້ວ່າ ໃຜເປັນຕົ້ນເຫດຄວາມຊົ່ວຮ້າຍທີ່ເກີດຂຶ້ນນີ້." ດັ່ງນັ້ນພວກເຂົາຈຶ່ງຈັບສະຫລາກ ແລະສະຫລາກນັ້ນກໍຕົກໃສ່ໂຢນາ.
8ແລ້ວພວກເຂົາເວົ້າກັບໂຢນາວ່າ, "ຈົ່ງບອກພວກເຮົາມາເຖີດ ວ່າໃຜເປັນເຫດໃຫ້ຄວາມຊົ່ວຮ້າຍນີ້ເກີດຂຶ້ນແກ່ພວກເຮົາ. ເຈົ້າມີອາຊີບຫຍັງ,
ແລະເຈົ້າມາແຕ່ໃສ? ເຈົ້າມາຈາກປະເທດໃດ? ແລະເຈົ້າເປັນຄົນຊາດໃດ?9ໂຢນາຕອບພວກເຂົາວ່າ, "ຂ້ານ້ອຍເປັນຄົນເຮັບເຣີ;
ແລະຂ້ານ້ອຍຢໍາເກງພຣະຢາເວ, ພຣະເຈົ້າແຫ່ງຟ້າສະຫວັນ, ຜູ້ຊຶ່ງສ້າງທະເລ ແລະ ແຜ່ນດິນໂລກ."10ແລ້ວ ຄົນເຫລົ່ານັ້ນກໍຍິ່ງຢ້ານຫລາຍຂຶ້ນ
ແລະ ເວົ້າກັບໂຢນາວ່າ, "ເປັນຫຍັງເຈົ້າຈຶ່ງເຮັດເຊັ່ນນີ້?" ເພາະໂຢນາໄດ້ບອກພວກເຂົາວ່າ ລາວກໍາລັງຫນີໃຫ້ພົ້ນຈາກຫນ້າຂອງພຣະຢາເວ.
11ເຂົາທັງຫລາຍບອກໂຢນາວ່າ, "ພວກເຮົາຄວນເຮັດແນວໃດກັບເຈົ້າ ເພື່ອເຮັດໃຫ້ທະເລສະຫງົບລົງ?" ເພາະທະເລຍິ່ງຮຸນແຮງຂຶ້ນເລື້ອຍໆ.
12ໂຢນາຈຶ່ງຕອບເຂົາທັງຫລາຍວ່າ,"ຈົ່ງຈັບຂ້ອຍໂຍນລົງໄປໃນທະເລ. ແລ້ວທະເລກໍຈະສະຫງົບລົງ,
ເພາະຂ້ອຍຮູ້ວ່າຂ້ານ້ອຍເອງເປັນຕົ້ນເຫດຂອງພາຍຸເທື່ອນີ້."13ຂະນະດຽວກັນນັ້ນ ພວກລູກເຮືອກໍຊ່ວຍກັນພະຍາຍາມແລ່ນເຮືອເຂົ້າແຄມໃຫ້ໄດ້,
ແຕ່ພວກເຂົາເຮັດບໍ່ໄດ້ ເພາະທະເລຕ້ານພວກເຂົາຢ່າງຮຸນແຮງຂຶ້ນກວ່າເກົ່າ.
14ດ້ວຍເຫດນັ້ນພວກເຂົາຈຶ່ງຮ້ອງຫາພຣະຢາເວ ແລະວ່າ, "ຂ້າແດ່ພຣະຢາເວ ຂ້ານ້ອຍທັງຫລາຍຂໍວິງວອນຕໍ່ພຣະອົງ
ຂໍຢ່າໃຫ້ພວກຂ້ານ້ອຍຖືກລົງໂທດ ເພາະຊີວິດຂອງຊາຍຄົນນີ້ເລີຍ,
ແລະຂໍຢ່າໃຫ້ຄວາມຜິດຂອງຄວາມຕາຍຂອງຊາຍຄົນນີ້ຕົກຢູ່ກັບພວກຂ້ານ້ອຍ,
ເພາະຂ້ານ້ອຍໄດ້ເຮັດສິ່ງທີ່ພໍພຣະທັຍພຣະອົງ."15ພວກເຂົາຈຶ່ງຈັບໂຢນາໂຍນລົງໄປໃນທະເລ, ແລະແລ້ວທະເລກໍສະຫງົບລົງ.
16ພວກເຂົາຢໍາເກງພຣະຢາເວຫລາຍ ພວກເຂົາໄດ້ຖວາຍສັດບູຊາແດ່ພຣະຢາເວ ແລະຕາມທີ່ໄດ້ສັນຍາໄວ້.
17ແລ້ວພຣະຢາເວກໍໄດ້ໃຫ້ປາໃຫຍ່ໂຕຫນຶ່ງ ກືນໂຢນາລົງໄປໄວ້ໃນທ້ອງ, ແລະໂຢນາໄດ້ຢູ່ໃນທ້ອງປານັ້ນເປັນເວລາ ສາມມື້ສາມຄືນ.

2 [1]ແລ້ວໂຢນາໄດ້ອະທິຖານເຖິງພຣະຢາເວ ພຣະເຈົ້າຂອງເພິ່ນຈາກໃນທ້ອງປາ[2]ທ່ານເວົ້າວ່າ, "ຂ້ານ້ອຍໄດ້ຮ້ອງຫາພຣະຢາເວ
ກ່ຽວກັບເລື່ອງຄວາມທຸກໃຈຂອງຂ້ານ້ອຍ ແລະພຣະອົງຊົງຕອບຂ້ານ້ອຍ; ຈາກບ່ອນເລິກຂອງແດນມໍຣະນາ
ຂ້ານ້ອຍໄດ້ຮ້ອງຂໍຄວາມຊ່ວຍເຫລືອ! ພຣະອົງຊົງໄດ້ຍິນສຽງຂອງຂ້ານ້ອຍ.

[3]ພຣະອົງຖິ້ມຂ້ານ້ອຍລົງໃນບ່ອນເລິກ, ລົງໃນໃຈກາງຂອງທະເລ, ແລະກະແສນ້ຳໄດ້ລ້ອມຂ້ານ້ອຍໄວ້; ບັນດາຄື້ນຂອງພຣະອົງ
ແລະຄື້ນຍັກໄດ້ພັດຜ່ານຂ້ານ້ອຍ.[4]ຂ້ານ້ອຍກ່າວວ່າ,'ຂ້ານ້ອຍຖືກຂັບໄລ່ໄປຈາກສາຍຕາຂອງພຣະອົງ;
ແຕ່ຂ້ານ້ອຍກໍຍັງຄອຍຖ້າຫາພຣະວິຫານອັນ ບໍຣິສຸດຂອງພຣະອົງ.'
[5]ນ້ຳກໍຂຶ້ນມາເຖິງຄໍຂອງຂ້ານ້ອຍ; ຄວາມເລິກກໍລ້ອມຂ້ານ້ອຍໄວ້; ເທົາທະເລກໍລ້ອມຫົວຂອງຂ້ານ້ອຍ.
[6]ຂ້ານ້ອຍລົງໄປເຖິງຖານຂອງບັນດາພູທັງຫລາຍ; ແຜ່ນດິນພ້ອມວົງລ້ຂອງມັນກໍປິດຂັງຂ້ານ້ອຍໄວ້ເປັນນິດ.
ແຕ່ພຣະອົງຊ່ວຍຊີວິດຂ້ານ້ອຍໃຫ້ພົ້ນຈາກຂຸມ, ພຣະຢາເວ, ພຣະເຈົ້າຂອງຂ້ານ້ອຍ!
[7]ເມື່ອຈິດໃຈພາຍໃນຂອງຂ້ານ້ອຍອ່ອນແອ, ຂ້ານ້ອຍກໍຄິດເຖິງພຣະຢາເວ; ແລ້ວຂ້ານ້ອຍຂໍຕໍ່ພຣະອົງ ຕໍ່ພຣະວິຫານບໍຣິສຸດຂອງພຣະອົງ.
[8]ບັນດາຄົນທີ່ສົນໃຈພຣະອື່ນໆ ອັນບໍ່ມີຄ່າກໍປະຕິເສດຄວາມສັດຊື່ຂອງພຣະອົງ ທີ່ມີຕໍ່ພວກເຂົາ.
[9]ແຕ່ສຳລັບຂ້ານ້ອຍ, ຂ້ານ້ອຍຈະຖວາຍເຄື່ອງບູຊາດ້ວຍສຽງແຫ່ງການຂອບພຣະຄຸນ; ຂ້ານ້ອຍຈະເຮັດໃຫ້ສຳເລັດຕາມທີ່ຂ້ານ້ອຍ
ໄດ້ປະຕິຍານໄວ້. ຄວາມພົ້ນມາຈາກພຣະຢາເວ!"[10]ແລ້ວພຣະຢາເວສັ່ງປາ ແລ້ວມັນກໍຄາຍໂຢນາອອກບ່ອນແຜ່ນດິນແຫ້ງ.

 generated on Tue Jun 17 19:01:42 2025

3 [1]ຖ້ອຍຄຳຂອງພຣະຢາເວໄດ້ກ່າວກັບໂຢນາເປັນເທື່ອທີສອງ, ກ່າວວ່າ,[2]"ຈົ່ງລຸກຂຶ້ນ, ໄປເມືອງນີນາເວ, ຊຶ່ງເປັນເມືອງໃຫຍ່,
ແລະປະກາດສິ່ງທີ່ເຮົາຈະບອກແກ່ເຈົ້າ."[3]ໂຢນາຈຶ່ງໄດ້ລຸກຂຶ້ນ ແລະໄປເມືອງນີນາເວດ້ວຍຄວາມເຊື່ອຟັງ ໃນຖ້ອຍຄຳຂອງພຣະຢາເວ.
ເມືອງນີນາເວເປັນເມືອງໃຫຍ່ຫລາຍ, ຕ້ອງໃຊ້ເວເລເຖິງສາມມື້ ຈຶ່ງຈະເດີນທາງຜ່ານເມືອງນີ້ໄດ້.

[4]ໂຢນາໄດ້ເຂົ້າໄປໃນເມືອງ ແລະຫລັງຈາກທີ່ເຂົ້າໄປໄດ້ຫນຶ່ງວັນແລ້ວ ລາວໄດ້ປະກາດແລະເວົ້າວ່າ, "ອີກສີ່ສິບມື້
ເມືອງນີນາເວຈະຖືກທຳລາຍ."[5]ຊາວເມືອງນີນາເວເຊື່ອໃນພຣະເຈົ້າ ແລະພວກເຂົາໄດ້ປະກາດໃຫ້ມີການອົດອາຫານ. ນຸ່ງຫົ່ມເຄື່ອງໄວ້ທຸກ,
ຕັ້ງແຕ່ຄົນທີ່ໃຫຍ່ໂຕ ຈົນເຖິງຜູ້ເລັກນ້ອຍທີ່ສຸດ.
[6]ເມື່ອກະສັດນີນາເວຮູ້ຂ່າວລືອງ. ພະອົງກໍລົງຈາກບັນລັງຂອງພຣະອົງ, ແກ້ເຄື່ອງຂອງພຣະອົງ, ສວມຊຸດທີ່ເຮັດດ້ວຍຜ້າປ່ານ,
ແລະນັ່ງກອງຂີ້ເຖົ່າ.[7]ພຣະອົງອອກໃບປະກາດວ່າ, "ໃນເມືອງນີນາເວ, ດ້ວຍອຳນາດຂອງກະສັດ
ແລະບັນດາຂ້າຣາຊະການທັງຫລາຍຂອງພະອົງ, ຫ້າມຄົນແລະສັດ, ຝູງສັດໃດໆ, ໄດ້ຊີມຣົດສິ່ງໃດໆ, ຫ້າມເຂົາທັງຫລາຍກິນ ຫລືດື່ມນ້ຳ.
[8]ແຕ່ໃຫ້ທັງຄົນແລະສັດ ສວມຊຸດທີ່ເຮັດດ້ວຍຜ້າປ່ານ ແລະໃຫ້ພວກເຂົາຮ້ອງຂໍດ້ວຍສຽງອັນດັງຕໍ່ພຣະເຈົ້າ.
ໃຫ້ທຸກຄົນກັບໃຈຈາກທາງຊົ່ວຮ້າຍຂອງເຂົາເສັຽ ແລະຈາກຄວາມຮຸນແຮງທີ່ມີພວກເຂົາໄດ້ເຮັດນັ້ນ.[9]ໃຜຈະຮູ້ໄດ້? ພຣະເຈົ້າອາດຈະຊົງປ່ຽນໃຈ
ປ່ຽນຈາກຄວາມໂກດອັນແຮງກ້າຂອງພຣະອົງ ເພື່ອພວກເຮົາຈະບໍ່ຕ້ອງຖືກລົງໂທດ."
[10]ພຣະເຈົ້າໄດ້ເຫັນສິ່ງທີ່ຊາວເມືອງນີນາເວເຮັດ, ທີ່ພວກເຂົາທັງຫລາຍໄດ້ກັບໃຈຈາກທາງຊົ່ວຮ້າຍຂອງພວກເຂົາ. ສະນັ້ນ
ພຣະເຈົ້າຈຶ່ງປ່ຽນໃຈບໍ່ລົງໂທດພວກເຂົາ, ຕາມທີ່ພຣະອົງເຄີຍກ່າວໄວ້ນັ້ນ.

 generated on Tue Jun 17 19:01:42 2025

4 [1]ໂຢນາບໍ່ພໍໃຈແລະໃຈຮ້າຍຫລາຍ.[2]ໂຢນາຈຶ່ງອະທິຖານຕໍ່ພຣະຢາເວວ່າ,"ໂອ້, ພຣະຢາເວ,
ນີ້ບໍ່ແມ່ນບໍສິ່ງທີ່ຂ້ານ້ອຍຂໍຕັ້ງແຕ່ເມື່ອຂ້ານ້ອຍກັບໄປບ້ານເມືອງ ຂອງຂ້ານ້ອຍຫລື? ນີ້ຄືເຫດຜົນທີ່ຂ້ານ້ອຍເຮັດແຕ່ທຳອິດ ແລະ
ພະຍາຍາມຫນີໄປເມືອງຕາກຊິດ—ເພາະຂ້ານ້ອຍຮູ້ວ່າພຣະອົງຊົງພຣະຄຸນ, ມີຄວາມເມດຕາ, ຮ້າຍຊ້າ, ເຕັມໄປດ້ວຍຄວາມສັດຊື່,
ແລະຈະຊົງຍົກໂທດຈາກການສິ່ງພັຍພິບັດ.[3]ດ້ວຍເຫດນີ້, ຂ້າແດ່ພຣະຢາເວເອີຍ, ຂ້ານ້ອຍຂໍພຣະອົງເອົາຊີວິດຂ້ານ້ອຍໄປສາ,
ເພາະການຕາຍກໍດີກວ່າ ການມີຊີວິດຢູ່ສຳລັບຂ້ານ້ອຍ."

[4]ພຣະຢາເວກ່າວວ່າ,"ດີແລ້ວຫລືທີ່ເຈົ້າໃຈຮ້າຍແບບນີ້?"[5]ແລ້ວໂຢນາຈຶ່ງອອກໄປຈາກເມືອງ ແລະ ນັ່ງລົງທາງທິດຕາເວັນອອກຂອງເມືອງນັ້ນ.
ລາວສ້າງຕູບຫລັງຫນຶ່ງໃນບ່ອນນັ້ນ ແລະນັ່ງຢູ່ໃນຕູບນັ້ນ ເພື່ອລໍຖ້າເບິ່ງ ສິ່ງທີ່ຈະເກີດຂຶ້ນກັບເມືອງນັ້ນ.
[6]ພຣະຢາເວຊົງໃຫ້ຕົ້ນໄມ້ເກີດຂຶ້ນມາ ແລະເຮັດໃຫ້ມັນໃຫຍ່ຂຶ້ນມາຈົນປົກເຫນືອໂຢນາ ຮົ່ມເງົາຂອງມັນປົກເຫນືອຫົວຂອງລາວ
ເພື່ອເຮັດໃຫ້ລາວຜ່ອນຄາຍຈາກຄວາມກະວົນກະວາຍ. ໂຢນາຈຶ່ງພໍໃຈຫລາຍກັບຕົ້ນໄມ້ຕົ້ນນັ້ນ.[7]ແຕ່ໃນເຊົ້າມື້ໃຫມ່ມາ.
ພຣະເຈົ້າເຮັດໃຫ້ມີຫນອນໂຕຫນຶ່ງ ມາກັດກິນຕົ້ນໄມ້ຕົ້ນນັ້ນ ແລະມັນກໍແຫ້ງກອບໄປ.
[8]ແລະເມື່ອຕາເວັນຂຶ້ນໃນເຊົ້າອີກມື້ຫນຶ່ງ, ພຣະເຈົ້າເຮັດໃຫ້ມີລົມຮ້ອນພັດມາຈາກທິດຕາເວັນອອກ. ນອກຈາກນັ້ນ
ຕາເວັນສ່ອງແສງລົງມາໃສ່ຫົວຂອງໂຢນາ ຈົນເຮັດໃຫ້ລາວເກືອບເປັນລົມລົ້ມໄປ. ແລ້ວໂຢນາຈຶ່ງຢາກທີ່ຈະຕາຍ.
ລາວເວົ້າກັບຕົນເອງວ່າ,"ເຮັດໃຫ້ຂ້ອຍຕາຍກໍດີກວ່າມີຊີວິດຢູ່."[9]ແລ້ວພຣະເຈົ້າກ່າວກັບໂຢນາວ່າ,"ດີແລ້ວບໍທີ່ເຈົ້າໃຈຮ້າຍກັບເລື່ອງຕົ້ນໄມ້ນີ້?"
ໂຢນາຕອບວ່າ,"ດີແລ້ວພຣະເຈົ້າຂ້າ ທີ່ຂ້ານ້ອຍໃຈຮ້າຍ, ຫລືແມ່ນແຕ່ຢາກຕາຍ."
[10]ພຣະຢາເວກ່າວວ່າ,"ເຈົ້າມີຄວາມເມດຕາຕໍ່ຕົ້ນໄມ້ຕົ້ນນີ້, ທີ່ເຈົ້າບໍ່ໄດ້ລົງແຮງປູກ, ບໍ່ໄດ້ເຮັດໃຫ້ມັນໃຫຍ່ຂຶ້ນ. ຊຶ່ງມັນໃຫຍ່ຂຶ້ນໃນຊ່ວງຄືນດຽວ
ແລະ ຕາຍໄປໃນຊ່ວງຄືນດຽວ.[11]ແລ້ວເຮົາບໍ່ສົມຄວນບໍ ທີ່ມີຄວາມເມດຕາຊາວເມືອງນີນາເວ, ເມືອງໃຫຍ່ນັ້ນ,
ຊຶ່ງມີຄົນຫລາຍກວ່າຫນຶ່ງແສນສອງຫມື່ນຄົນ ຜູ້ທີ່ຍັງບໍ່ຮູ້ເຖິງຄວາມແຕກຕ່າງ ລະຫວ່າງມືຂວາແລະມືຊ້າຍ,
ແລະອີກພ້ອມທັງຝູງສັດຫລວງຫລາຍນັ້ນບໍ?"

# ມີກາ

1 [1]ສິ່ງນີ້ຄື ພຣະທັມຂອງພຣະຢາເວທີ່ມາຮອດມີກາ ຊາວເມືອງໂມເຣເຊັດ ໃນຍຸກສະໄຫມໂຢທາມ, ອາຮາດ, ແລະ ເຮເຊກີຢາ,
ກະສັດແຫ່ງຢູດາຍ, ຊຶ່ງເຂົາໄດ້ເຫັນກ່ຽວກັບນະຄອນຊາມາເຣັຽ ແລະນະຄອນເຢຣູຊາເລັມ.

[2]ຈົ່ງຟັງເອົາ, ປະຊາຊົນທຸກຊາດເອີຍ. ໂອຈົ່ງຟັງ, ແຜ່ນດິນໂລກ, ແລະ ສິ່ງທັງປວງທີ່ຢູ່ໃນທ່ານ.
ຂໍໃຫ້ພຣະຢາເວອົງພຣະຜູ້ເປັນເຈົ້າເປັນພະຍານກ່າວໂທດພວກທ່ານ, ອົງພຣະຜູ້ເປັນເຈົ້າຈາກພຣະວິຫານບໍຣິສຸດຂອງພຣະອົງ.[3]ເບິ່ງແມ,
ພຣະຢາເວສະເດັດອອກຈາກທີ່ປຣະທັບຂອງພຣະອົງ; ພຣະອົງຈະສະເດັດລົງມາ
ແລະຈະຊົງຢຽບເທິງສະຖານທີ່ສູງທັງຫລາຍເທິງແຜ່ນດິນໂລກ.[4]ພູເຂົາທັງຫລາຍຈະເປື່ອຍລະລາຍໄປພາຍໃຕ້ພຣະອົງ;
ບັນດາຮ່ອມພູຈະຖືກແຍກອອກ ຄືຂີ້ເຜີ້ງຖືກໄຟຮ້ອນ, ຄືສາຍນ້ຳທີ່ໄຫລລົງມາຕາມເນີນພູ.
[5]ເຫດການທັງຫມົດນີ້ເກີດຂຶ້ນເພາະການກະບົດຂອງຢາໂຄບ, ແລະເພາະບາບທັງຫລາຍຂອງຊາວອິສະຣາເອນ.
ເຫດຜົນການກະບົດຂອງຢາໂຄບນັ້ນແມ່ນຫຍັງ? ຊາມາເຣັຽບໍ່ແມ່ນບໍ? ແມ່ນຫຍັງຄືເຫດຜົນສຳລັບສະຖານສູງຂອງຢູດາຍ?
ເຢຣູຊາເລັມບໍ່ແມ່ນບໍ?
[6]"ເຮົາຈະເຮັດໃຫ້ຊາມາເຣັຽເປັນກອງສິ່ງຮັກຮ້າງພັງເພໃນທົ່ງຫຍ້າ, ຄືທີ່ສຳລັບເຮັດສວນອະງຸ່ນ. ເຮົາຈະເທຫີນຂອງນາງ ລົງທີ່ຮ່ອມພູ;
ເຮົາຈະເຜີຍໃຫ້ເຫັນຮາກຖານຂອງນາງ.[7]ຮູບເຄົາຣົບແກະສະຫລັກທັງຫມົດຂອງນາງນັ້ນຈະຖືກທັບໃຫ້ຫມຸ່ນທະລາຍ; ແລະ
ສິນຈ້າງລາງວັນທີ່ນາງໄດ້ມາຈະຖືກເຜົາ. ເຮົາຈະທຳລາຍຮູບເຄົາຣົບທັງຫມົດຂອງນາງ ເພາະສິນຈ້າງຂອງໂສເພນີຂອງນາງ, ແລະ
ນາງນັ້ນໄດ້ຮວບຮວມພວກເຂົາຂຶ້ນມາ, ແລະ ພວກມັນຈະກັບເປັນສິນຈ້າງຂອງໂສເພນີອີກ."
[8]ເພາະເຫດຜົນນີ້ ຂ້າພຣະເຈົ້າຈະຄ່ຳຄວນ ແລະຮ້ອງໄຫ້; ຂ້າພຣະເຈົ້າຈະຍ່າງໄປດ້ວຍຕີນເປົ່າ ແລະເປືອຍຕົວ;
ຂ້າພຣະເຈົ້າຈະຄ່ຳຄວນຄືສຽງຫມາປ່າ ແລະ ສຽງຄວນຄາງຄືສຽງນົກເຄົ້າ.[9]ເພາະວ່າບາດແຜຂອງນາງນັ້ນຮັກສາບໍ່ເຊົາ,
ເພາະມັນໄດ້ລາມມາຮອດຢູດາຍ. ໄດ້ມາຮອດປະຕູເມືອງແຫ່ງປະຊາຊົນຂອງຂ້າພຣະເຈົ້າ ຄືຮອດເຢຣູຊາເລັມ.[10]ຢ່າບອກເລື່ອງນີ້ໃນເມືອງກາດ;
ຢ່າຮ້ອງໄຫ້ເລີຍ. ທີ່ເມືອງເບັດເລອາຟະຣາ ຂ້າພຣະເຈົ້າເກືອກກິ້ງໂຕຂອງຂ້າພຣະເຈົ້າໃນຂີ້ຝຸ່ນ.
[11]ຊາວເມືອງຊາເຟັຽເອີຍ, ຈົ່ງຜ່ານໄປຕາມທາງຂອງພວກເຈົ້າ, ດ້ວຍຕົວເປືອຍເປົ່າ ແລະອັບອາຍ. ຊາວເມືອງຊາອານານບໍ່ໄດ້ອອກມາ.
ເບັດເອເຊນກຳລັງຮ້ອງໄຫ້, ເພາະທີ່ຫມັ້ນຂອງພວກເຈົ້າຈະຖືກເອົາໄປ.[12]ເພາະຊາວເມືອງມາໂຣດເຝົ້າຄອຍຂ່າວດີໃຈຈົດຈໍ່,
ເພາະສິ່ງຮ້າຍໄດ້ລົງມາຈາກພຣະຢາເວເຖິງບັນດາປະຕູເມືອງເຢຣູຊາເລັມ.
[13]ຈົ່ງທຽມຊຸດມ້າເຂົ້າກັບລົດມ້າເສິກ, ຊາວເມືອງລາກິດ. ພວກເຈົ້າ, ເມືອງລາກິດເອີຍ, ເຈົ້າເລີ່ມສ້າງບາບໃຫ້ແກ່ລູກສາວຂອງຊີໂອນ,
ເພາະບັນດາການລະເມີດຂອງອິສະຣາເອນໄດ້ເຫັນໃນເຈົ້າ.[14]ດັ່ງນັ້ນເຈົ້າຈະມອບຂອງໄວ້ອາລັຍໃຫ້ແກ່ໂມເຣເຊັດກາດ;
ບັນດາເມືອງຂອງອັກຊີບຈະເຮັດໃຫ້ບັນດາກະສັດອິສະຣາເອນຜິດຫວັງ.
[15]ເຮົາຈະນຳສັດຕຣູໃຫ້ແກ່ພວກເຈົ້າ, ສັດຕຣູຊາວເມືອງມາເຣຊາເອີຍ; ຄວາມງົດງາມຂອງອິສະຣາເອນ ຈະມາຍັງເມືອງອາດຸນລຳ.[16]ຈົ່ງແຖຫົວ
ແລະ ຕັດຜົມຂອງເຈົ້າເພື່ອລູກໆ ທີ່ເຈົ້າຮັກ. ຈົ່ງເຮັດໃຫ້ຫົວຂອງເຈົ້າເອງລ້ານດັ່ງນົກອິນຊີ, ເພາະລູກຂອງເຈົ້າຈະຈາກເຈົ້າໄປເປັນຊະເລີຍ.

2 [1]ວິບັດເກີດແກ່ຜູ້ວາງແຜນຮ້າຍ, ແລະ ເຖິງຜູ້ທີ່ຄິດເຮັດຊົ່ວຢູ່ເທິງບ່ອນນອນຂອງຕົນ. ໃນຕອນຮຸ່ງເຊົ້າພວກເຂົາເຮັດ
ເພາະພວກເຂົາມີອຳນາດ.[2]ພວກເຂົາປາຖະໜາໄຮ່ນາ ແລ້ວກໍຍຶດເອົາໄປ; ພວກເຂົາຢາກໄດ້ບ້ານເຮືອນ ແລະ ກໍຍຶດເອົາໄປ. ພວກເຂົາກົດຂີ່ຄົນ
ແລະ ກໍຈະຍຶດບ້ານເຮືອນຂອງຄົນນັ້ນ, ແລະ ມໍຣະດົກຂອງຄົນນັ້ນ.

[3]ດັ່ງນັ້ນ ພຣະຢາເວຈຶ່ງກ່າວດັ່ງນີ້ວ່າ, “ເບິ່ງແມ, ເຮົາກຳລັງວາງແຜນໃຫ້ສິ່ງຊົ່ວຮ້າຍຕົກກັບຕະກຸນນີ້, ຈາກເຈົ້າຈະຫລົບຫລີກບໍ່ໄດ້.
ເຈົ້າຈະຍ່າງແບບທະນົງບໍ່ໄດ້, ເພາະມັນຈະເປັນເວລາອັນຊົ່ວຮ້າຍ.[4]ໃນເວລານັ້ນສັດຕຣູຂອງເຈົ້າຈະຮ້ອງເພງກ່ຽວກັບເຈົ້າ, ແລະ
ຈະຮ້ອງໄຫ້ດ້ວຍການຄ້ຳຄວນຢ່າງຂົມຂື່ນ. ພວກເຂົາຈະຮ້ອງວ່າ, “ພວກເຮົາຊາວອິສະຣາເອນຖືກທຳລາຍຈົນຫມົດໄປ;
ພຣະຢາເວຊົງປ່ຽນເຂດແດນດິນຂອງປະຊາຊົນຂອງຂ້ານ້ອຍ. ພຣະອົງຊົງຍ້າຍເຂດແດນໄປຈາກຂ້ານ້ອຍໄດ້ແນວໃດ?
ພຣະອົງຊົງແບ່ງໄຮ່ນາຂອງພວກເຮົາແກ່ບັນດາຄົນທໍຣະຍົດ!'"[5]ດັ່ງນັ້ນ,
ເຈົ້າຄົນຮັ່ງມີຈະບໍ່ມີບັນດາຜູ້ສືບຕະກຸນທີ່ຈະໄດ້ຮັບສ່ວນແບ່ງເຂດແດນໂດຍຈັບສະຫລາກໃນຊຸມຊົນຂອງພຣະຢາເວພວກເຂົາ.
[6]"ຢ່າເຜີຍພຣະວັດຈະນະ," ພວກເຂົາກ່າວ. "ພວກເຂົາຕ້ອງບໍ່ເຜີຍພຣະວັດຈະນະເລື່ອງເຫລົ່ານີ້;
"ເລື່ອງການຕິຕຽນຈະບໍ່ມາອີກ."[7]ເຮືອນຂອງຢາໂຄບເອີຍ, ຄວນຈະເວົ້າແບບນີ້ແທ້ບໍ, "ພຣະວິນຍານຂອງພຣະຢາເວໂກດຮ້າຍບໍ?
ຫມົດຄວາມອົດທົນແລ້ວບໍ?" ຖ້ອຍຄຳຂອງເຮົາເຮັດໃຫ້ເກີດຜົນດີ ແກ່ຜູ້ດຳເນີນຊີວິດຢ່າງຊື່ຕົງບໍ່ແມ່ນບໍ?
[8]ຕໍ່ມາປະຊາຊົນຂອງເຮົາລຸກຂຶ້ນຢ່າງກັບເປັນສັດຕຣູ. ເຈົ້າດຶງເອົາເສື້ອຄຸມ, ເສື້ອຜ້າຊັ້ນນອກ,
ຈາກບັນດາຜູ້ຜ່ານໄປໂດຍປາສະຈາກຄວາມສົງໃສ, ຄືດັ່ງບັນດາທະຫານກັບມາຈາກສົງຄາມໂດຍຄິດວ່ານັ້ນປອດພັຍແລ້ວ.
[9]ພວກເຈົ້າຂັບໄລ່ພວກຜູ້ຍິງທີ່ເປັນປະຊາຊົນຂອງເຮົາອອກໄປຈາກເຮືອນອັນຜາສຸກຂອງພວກນາງ;
ພວກເຈົ້າໄດ້ເອົາຄວາມສຸກຂອງເຮົາໄປຈາກລູກໆ ຂອງພວກນາງຕະຫລອດໄປ.[10]ຈົ່ງລຸກຂຶ້ນ ແລະໄປສາ, ເພາະນີ້ບໍ່ແມ່ນທີ່ ທີ່ເຈົ້າຈະຕ້ອງຢູ່,
ເພາະທີ່ບ່ອນນີ້ສົກກະປົກ; ມັນຖືກທຳລາຍຢ່າງສິ້ນເຊີງ.[11]ຖ້າບາງຄົນມາຫາເຈົ້າດ້ວຍໃຈສົກກະປົກ ແລະ ຂີ້ຕົວະ ແລະເວົ້າວ່າ,
“ຂ້ອຍຈະເຜີຍພຣະວັດຈະນະຕໍ່ເຈົ້າກ່ຽວກັບເຫລົ້າອະງຸ່ນ ແລະສຸຣາ,"
ເຂົາຄືຈະໄດ້ຮັບການພິຈາຣະນາເປັນຜູ້ເຜີຍພຣະວັດຈະນະສຳລັບປະຊາຊົນນີ້.
[12]ໂອຢາໂຄບເອີຍ, ເຮົາຈະລວບລວມເຈົ້າທັງຫລາຍຢ່າງແນ່ນອນ. ເຮົາຈະລວມຄົນອິສະຣາເອນທີ່ເຫລືອຢູ່ຢ່າງແນ່ນອນ.
ເຮົາຈະນຳພວກເຂົາມາໄວ້ນຳກັນ, ຄືແກະຢູ່ໃນຄອກ ຄືຝູງສັດຢູ່ກາງທົ່ງຫຍ້າຂອງມັນ. ທີ່ສຽງດັງເພາະປະຊາຊົນທີ່ລົ້ນຫລາມ.
[13]ຜູ້ທີ່ເປີດທາງສຳລັບພວກເຂົາຈະຍ່າງນຳຫນ້າພວກເຂົາໄປ ພວກເຂົາຈະຜ່ານປະຕູເມືອງ ແລະ ອອກໄປ;
ກະສັດຂອງພວກເຂົາຈະສະເດັດນຳຫນ້າພວກເຂົາ. ຄືພຣະຢາເວຈະຊົງນຳຫນ້າພວກເຂົາ.

 generated on Tue Jun 17 19:01:42 2025

3 [1]ຂ້າພຣະເຈົ້າກ່າວວ່າ “ບັດນີ ຈົ່ງຟັງ, ພວກທ່ານທີ່ເປັນຜູ້ນໍາຂອງຢາໂຄບ ແລະ ພວກທ່ານຜູ້ທີ່ປົກຄອງຄົວເຮືອນຂອງອິສະຣາເອນ:
ເປັນການຖືກຕ້ອງບໍ່ແມ່ນບໍທີ່ພວກທ່ານຕ້ອງເຂົ້າໃຈຄວາມຍຸຕິທັມ?[2]ພວກທ່ານຜູ້ທີ່ກຽດຊັງຄວາມດີ ແລະຮັກຄວາມຊົ່ວ,
ພວກທ່ານຜູ້ທີ່ລອກຫນັງຂອງພວກເຂົາອອກ, ແລະ ຂູດຊີ້ນອອກຈາກກະດູກຂອງພວກເຂົາ -[3]ພວກທ່ານຜູ້ທີ່ກິນຊີ້ນປະຊາຊົນຂອງເຮົາ, ແລະ
ລອກຫນັງຂອງພວກເຂົາອອກ, ແລະ ຫັກກະດູກຂອງພວກເຂົາຕັດເປັນຕ່ອນໆ, ຄືຊີ້ນຢູ່ໃນຫມໍ້.

[4]ແລ້ວພວກທ່ານຜູ້ທີ່ປົກຄອງຈະຮ້ອງຂໍຕໍ່ພຣະຢາເວ, ແຕ່ພຣະອົງຈະບໍ່ຊົງຕອບພວກທ່ານ. ພຣະອົງຈະປິດບັງຫນ້າຂອງພຣະອົງຈາກທ່ານ
ໃນເວລານັ້ນ ພຣະອົງຈະບໍ່ຟັງຄໍາອະທິຖານຂອງພວກທ່ານ, ເພາະພວກທ່ານໄດ້ເຮັດຊົ່ວໄວ້ຫລາຍຢ່າງ."
[5]ພຣະຢາເວໄດ້ກ່າວດັ່ງນີ້ກ່ຽວກັບ ຜູ້ປະກາດພຣະທັມຜູ້ຊຶ່ງໄດ້ນໍາປະຊາຊົນຂອງເຮົາໃຫ້ຫລົງທາງໄປ, "ສໍາລັບຜູ້ທີ່ລ້ຽງພວກເຂົາ,
ພວກເຂົາຮ້ອງວ່າ, ' ຈົ່ງມີຄວາມຮຸ່ງເຮືອງ.' ແຕ່ເພື່ອຜູ້ຄົນເຫລົ່ານັ້ນທີ່ບໍ່ຍື່ນອີຫຍັງໃສ່ປາກຂອງພວກເຂົາ,
ພວກເຂົາຈະປະກາດສົງຄາມຕໍ່ຕ້ານເຂົາ.[6]ດັ່ງນັ້ນ, ຈະມີແຕ່ກາງຄືນທີ່ປາສະຈາກນິມິດແກ່ພວກທ່ານ;
ຄວາມມືດຄຶ້ມຈະບັງເກີດເພື່ອວ່າພວກທ່ານຈະທໍານວາຍອີຫຍັງບໍ່ໄດ້. ດວງອາທິດຈະຫາຍໄປສໍາລັບພວກຜູ້ເຜີຍພຣະວັດຈະນະ, ແລະ
ກາງເວັນກໍຈະກາຍເປັນຄວາມມືດສໍາລັບພວກເຂົາ.[7]ຜູ້ເຫັນນິມິດຈະອັບອາຍ, ແລະ ຜູ້ທໍານວາຍຈະສັບສົນ.
ພວກເຂົາທຸກຄົນຈະປິດປາກຂອງພວກເຂົາ, ເພາະວ່າບໍ່ມີຄໍາຕອບມາຈາກເຮົາ."
[8]ແຕ່ສໍາລັບຂ້າພຣະເຈົ້າ, ຂ້າພຣະເຈົ້າເຕັມດ້ວຍຣິດອໍານາດດ້ວຍພຣະວິນຍານຂອງພຣະຢາເວ, ແລະ ເຕັມໄປດ້ວຍຄວາມຍຸຕິທັມ ແລະ
ຣິດອໍານາດ ເພື່ອປະກາດການລະເມີດຂອງຢາໂຄບແກ່ຕົວເຂົາ, ແລະ ເຖິງຄວາມບາບອິສະຣາເອນຂອງພວກເຂົາ.
[9]ບັດນີ ຈົ່ງຟັງຂໍ້ຄວາມນີ້ເຖີ້ນ, ພວກທ່ານຜູ້ທີ່ເປັນຜູ້ນໍາຂອງເຊື້ອສາຍຂອງຢາໂຄບ, ແລະ ຜູ້ປົກຄອງເຊື້ອສາຍຂອງອິສະຣາເອນ,
ພວກທ່ານຜູ້ຊຶ່ງຕໍ່ຕ້ານຄວາມຍຸຕິທັມ, ແລະ ຜູ້ບິດເບືອນຄວາມຖືກຕ້ອງທັງຫມົດ.[10]ພວກທ່ານຜູ້ທີ່ສ້າງຊີໂອນດ້ວຍໂລຫິດ ແລະ
ສ້າງເຢຣູຊາເລັມດ້ວຍຄວາມອະຍຸຕິທັມ.[11]ພວກທ່ານຜູ້ນໍາຂອງເມືອງນີ້ຕັດສິນດ້ວຍຄວາມເຫັນແກ່ສິນບົນ,
ບັນດາປະໂລຫິດສັ່ງສອນດ້ວຍເຫັນແກ່ລາຄາຄ່າສອນ, ແລະ ອີກທັງບັນດາຜູ້ເຜີຍພຣະວັດຈະນະກໍທໍານວາຍດ້ວຍເຫັນແກ່ເງິນ.
ເຖິງຢ່າງນັ້ນເຂົາທັງຫລາຍຍັງອ້າງວ່າເພິ່ງພາພຣະຢາເວ ແລະ ກ່າວວ່າ “ພຣະຢາເວສະຖິດທ່າມກາງເຮົາບໍ່ແມ່ນບໍ?
ບໍ່ມີຄວາມຫາຍະນະອີຫຍັງເກີດຂຶ້ນແກ່ເຮົາໄດ້."
[12]ດັ່ງນັ້ນ, ເພາະພວກທ່ານນີ້ເອງ, ຊີໂອນຈະຖືກໄຖຄືທົ່ງນາ, ເຢຣູຊາເລັມຈະກາຍເປັນກອງສິ່ງຮົກຮ້າງເພພັງ, ແລະ
ເນີນພູແຫ່ງພຣະວິຫານຈະເປັນຄືເນີນພູປ່າຮົກ.

 generated on Tue Jun 17 19:01:42 2025

4 [1]ແຕ່ໃນບັ້ນປາຍ ສິ່ງນີ້ຈະເກີດຂຶ້ນວ່າ ພູເຂົາທີ່ພຣະວິຫານຂອງອົງພຣະຢາເວ ຈະສະຖາປະນາຂຶ້ນຢູ່ເຫນືອຫມູ່ພູເຂົາທັງຫລາຍ.
ຈະໄດ້ຮັບການຍົກຊູເຫນືອບັນດາພູເຂົາ, ແລະ ຊົນຊາດຕ່າງໆ ຈະລັ່ງໄຫລໄປບ່ອນນັ້ນ.

[2]ປະຊາຊາດຫລວງຫລາຍຈະມາ ແລະກ່າວວ່າ, "ມາເຖີ້ນ, ໃຫ້ພວກເຮົາຂຶ້ນໄປເທິງພູເຂົາຂອງພຣະຢາເວ,
ໄປສູ່ພຣະນິເວດຂອງພຣະເຈົ້າຂອງຢາໂຄບ. ພຣະອົງຈະຊົງສອນພວກເຮົາໃນທາງຂອງພຣະອົງແກ່ເຮົາ, ແລະ
ເຮົາຈະດຳເນີນໃນວິຖີທາງຂອງພຣະອົງ." ເພາະບົດບັນຍັດຈະອອກມາຈາກຊີໂອນ, ແລະ
ພຣະວັດຈະນະຂອງພຣະຢາເວຈະອອກມາຈາກເຢຣູຊາເລັມ.[3]ພຣະອົງຈະຊົງຕັດສິນຄວາມໃນທ່າມກາງຊົນຊາດທັງຫລາຍ ແລະ
ຈະຕັດສິນໃຫ້ບັນດາຊາດຕ່າງໆ ຈຳນວນຫລາຍທີ່ຢູ່ໄກອອກໄປ. ພວກເຂົາຈະຕີດາບຂອງພວກເຂົາໃຫ້ເປັນໝາກສົບໄຖນາ ແລະ
ຕີຫອກຂອງພວກເຂົາໃຫ້ເປັນມີດຕັດກິ່ງໄມ້. ປະຊາຊາດຈະບໍ່ຍົກດາບຂຶ້ນຕໍ່ສູ້ກັນອີກ, ທັງຈະບໍ່ມີການຝຶກອົບຮົມດ້ານການສົງຄາມອີກຕໍ່ໄປ.
[4]ທຸກຄົນຕ່າງກໍນັ່ງຢູ່ໃຕ້ຊຸ້ມອະງຸ່ນ ແລະ ໃຕ້ຕົ້ນຫມາກເດື່ອຂອງຕົນ. ຈະບໍ່ມີໃຜເຮັດໃຫ້ພວກເຂົາຢ້ານ,
ເພາະປາກຂອງພຣະຢາເວຈອມໂຍທາໄດ້ກ່າວຢ່າງນີ້ແລ້ວ.[5]ເພາະວ່າຊົນຊາດທັງຫລາຍຕ່າງກໍດຳເນີນ, ໃນນາມແຫ່ງພຣະຕ່າງໆຂອງຕົນ.
ແຕ່ພວກເຮົາຈະດຳເນີນໃນພຣະນາມຂອງພຣະຢາເວພຣະເຈົ້າຂອງເຮົາຕະຫລອດໄປເປັນນິດ.
[6]ພຣະຢາເວປະກາດວ່າ, "ໃນວັນນັ້ນເຮົາຈະລວບລວມຄົນພິການ ແລະ ຈະລວບລວມບັນດາຜູ້ຖືກຂັບໄລ່ໄປ ແລະ ບັນດາຜູ້ທີ່ເຮົາໄດ້ໃຫ້ທຸກໃຈ.
[7]ເຮົາຈະໃຫ້ຄົນພິການເປັນຄົນທີ່ເຫລືອຢູ່, ແລະ ໃຫ້ຄົນທີ່ຖືກຂັບອອກໄປເປັນຊາດທີ່ແຂງແກ່ງ, ແລະ
ພຣະຢາເວຈະຊົງປົກຄອງເຫນືອພວກເຂົາທີ່ພູເຂົາຊີໂອນ, ຕັ້ງແຕ່ບັດນີ້ເປັນຕົ້ນ ແລະ ຕະຫລອດໄປເປັນນິດ.
[8]ສ່ວນເຈົ້າຜູ້ເປັນຫໍສັງເກດການຂອງຝູງແກະ, ເປັນພູເຂົາຂອງທິດາແຫ່ງຊີໂອນ - ເຖິງພຣະອົງ, ອານາຈັກດັ້ງເດີມຈະກັບມາ
ຄືຣາຊອານາຈັກແຫ່ງລູກຍິງເຢຣູຊາເລັມ.
[9]ເວລານີ້, ເປັນຫຍັງເຈົ້າຮ້ອງສຽງດັ່ງແທ້? ບໍ່ມີກະສັດປົກຄອງເຈົ້າບໍ? ທີ່ປຶກສາຂອງເຈົ້າຕາຍແລ້ວບໍ?
ເປັນຫຍັງເຈົ້າຈຶ່ງເຈັບປວດທໍຣະມານຄືກັບຍິງຈະອອກລູກແບບນີ້?[10]ທິດາແຫ່ງຊີໂອນເອີຍ, ຈົ່ງເຈັບປວດທໍຣະມານ
ດ້ວຍຄວາມເຈັບປວດແສນສາຫັດ ຄືຜູ້ຍິງທີ່ກຳລັງເກີດລູກ. ເພາະບັດນີ້ເຈົ້າຕ້ອງອອກຈາກເມືອງໄປອາໄສຢູ່ໃນທົ່ງນາ, ແລະ
ຈະໄປທີ່ນະຄອນບາບີໂລນ. ເຈົ້າຈະໄດ້ຮັບການຊ່ວຍກູ້ບ່ອນນັ້ນ. ແລ້ວອົງພຣະຜູ້ເປັນເຈົ້າຈະຊົງຊ່ວຍກູ້ເຈົ້າ
ໃຫ້ພົ້ນຈາກມືຂອງສັດຕຣູທັງຫລາຍຂອງເຈົ້າ.
[11]ບັດນີ້ຫລາຍຊົນຊາດ ໄດ້ຊຸມນຸມຕໍ່ສູ້ເຈົ້າ; ເຂົາກ່າວວ່າ, “ໃຫ້ນາງຖືກຢຽບຢ່ຳ
ໃຫ້ຕາຂອງເຮົາໄດ້ເບິ່ງຊີໂອນດ້ວຍຄວາມສະໃຈ.'"[12]ຜູ້ເຜີຍພຣະວັດຈະນະເວົ້າວ່າ, “ເຂົາທັງຫລາຍບໍ່ເຂົ້າໃຈໃນແຜນການຂອງພຣະອົງ,
ທີ່ພຣະອົງຊົງຮວບຮວມເຂົາທັງຫລາຍເຂົ້າມາ ຄືລວມຟ່ອນເຂົ້າໄວ້ທີ່ລານນວດເຂົ້າ."
[13]ພຣະຢາເວກ່າວວ່າ, "ທິດາແຫ່ງຊີໂອນເອີຍ, ຈົ່ງລຸກຂຶ້ນ ແລະນວດເຂົ້າເຖີ້ນ, ເພາະເຮົາຈະໃຫ້ເຈົ້າມີເຂົາເຫລັກ, ແລະ
ເຮົາຈະໃຫ້ເຈົ້າມີກີບຕີນເປັນທອງສຳຣິດ. ເຈົ້າຈະຢຽບຢ່ຳທຳລາຍປະຊາຊົນຫລາຍຊາດ. ເຮົາຈະອຸທິດ
ສິ່ງທີ່ພວກເຂົາໄດ້ມາໂດຍບໍ່ຊອບທັມນັ້ນແກ່ເຮົາເອງ, ຄືພຣະຢາເວ, ຖວາຍຊັບສິນຂອງພວກເຂົາແກ່ເຮົາ,
ຄືອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກທັງຫມົດ."


generated on Tue Jun 17 19:01:42 2025

5 [1]ບັດນີ້ເຈົ້າຈົ່ງລະດົມໄພ່ພົນເຂົ້າຮ່ວມກັນ, ລູກຍິງແຫ່ງເຫລົ່າທະຫານ; ເຫລົ່າທະຫານໄດ້ຕັ້ງຄ້າຍລ້ອມເມືອງໄວ້ແລ້ວ,
ພວກເຂົາຈະຕີຜູ້ນຳຂອງຊາດອິສະຣາເອນທີ່ແກ້ມດ້ວຍໄມ້ກະບອງ.

[2]ແຕ່ເຈົ້າ, ເບັດເລເຮັມ ເອຟຣາທາເອີຍ, ເຖິງແມ່ນວ່າເຈົ້າເປັນຄົນເລັກນ້ອຍໃນບັນດາຕະກຸນຂອງຢູດາຍ,
ແຕ່ຈາກເຈົ້າຈະມີຜູ້ຫນຶ່ງອອກມາເພື່ອເຮົາ ເພື່ອເປັນຜູ້ທີ່ຈະປົກຄອງໃນອິສະຣາເອນ, ຜູ້ທີ່ການເລີ່ມຕົ້ນມາຈາກອະດີດຕະການ, ຈາກນິຣັນການ.
[3]ດັ່ງນັ້ນ ພຣະເຈົ້າຈະຊົງຖິ້ມພວກເຂົາ, ຈົນເຖິງເວລາທີ່ຍິງຜູ້ເຈັບທ້ອງຈະເກີດລູກ,
ແລ້ວບັນດາພີ່ນ້ອງທີ່ເຫລືອຢູ່ຈະກັບມາຍັງປະຊາຊົນອິສະຣາເອນ.
[4]ເພິ່ນຈະປົກຄອງປະຊາຊົນຂອງເພິ່ນ ໂດຍພຣະກຳລັງຂອງພຣະຢາເວ, ດ້ວຍຄວາມຍິ່ງໃຫຍ່ແຫ່ງພຣະນາມພຣະຢາເວພຣະເຈົ້າຂອງເຂົາ.
ເຂົາທັງຫລາຍຈະດຳຣົງຢູ່ໄດ້. ເພາະບັດນີ້ເຂົາຈະເປັນໃຫຍ່ຈົນເຖິງສຸດປາຍແຜ່ນດິນໂລກ.[5]ເຂົາຈະເປັນສັນຕິສຸກຂອງພວກເຮົາ.
ເມື່ອຄົນອັດຊີເຣັຽເຂົ້າມາໃນແຜ່ນດິນຂອງພວກເຮົາ, ແລ້ວພວກເຮົາຈະຕັ້ງຄົນລ້ຽງແກະຈຳນວນເຈັດຄົນ ແລະ
ຜູ້ນຳຈຳນວນແປດຄົນຂຶ້ນມາສູ້ກັບພວກເຂົາ.
[6]ພວກເຂົາຈະເບິ່ງແຍງແຜ່ນດິນອັດຊີເຣັຽດ້ວຍດາບ, ແລະ ແຜ່ນດິນນິມໂຣດທາງເຂົ້າເມືອງ. ເຂົາຈະຊ່ວຍກູ້ພວກເຮົາໃຫ້ພົ້ນຈາກຄົນອັດຊີເຣັຽ,
ເມື່ອເຂົາທັງຫລາຍມາຍັງແຜ່ນດິນຂອງພວກເຮົາ, ເມື່ອພວກເຂົາຍ່າງເຂົ້າໄປໃນເຂດແດນຂອງພວກເຮົາ.
[7]ຄົນທີ່ເຫລືອຢູ່ຂອງຢາໂຄບຈະຢູ່ທ່າມກາງປະຊາຊາດທັງຫລາຍ ຄືນ້ຳຄ້າງຈາກພຣະຢາເວ, ຄືນ້ຳຝົນທີ່ຕົກລົງພືດພັນ, ຊຶ່ງບໍ່ຖ້າມະນຸດ ແລະ
ພວກເຂົາບໍ່ຖ້າຄອຍລູກຫລານຂອງມະນຸດ.
[8]ຄົນທີ່ເຫລືອຢູ່ຂອງຢາໂຄບຈະຢູ່ທ່າມກາງປະຊາຊາດ, ຢູ່ທ່າມກາງບັນດາປະຊາຊົນ, ຄືສິງໂຕຫນຶ່ງໃນທ່າມກາງສັດປ່າທັງຫລາຍ,
ຄືສິງໂຕຫນຸ່ມໃນຝູງແກະ. ເມື່ອເຂົາຍ່າງຜ່ານພວກເຂົາໄປ, ເຂົາຈະຢຽບຢ່ຳຄືພວກເຂົາ ແລະ ຈີກພວກເຂົາອອກເປັນຕ່ອນໆ, ແລະ
ທີ່ນັ້ນຈະບໍ່ມີໃຜຊ່ວຍພວກເຂົາໄດ້.[9]ມືຂອງເຈົ້າຈະຍົກຂຶ້ນຕໍ່ຕ້ານສັດຕຣູຂອງເຈົ້າ, ແລະສັດຕຣູທັງຫມົດຈະຖືກກຳຈັດ.
[10]"ໃນມື້ນັ້ນສິ່ງນີ້ຈະເກີດຂຶ້ນ," ພຣະຢາເວກ່າວວ່າ, "ເຮົາຈະກຳຈັດບັນດາມ້າຂອງເຈົ້າໃຫ້ຫມົດໄປຈາກບັນດາທ່າມກາງເຈົ້າ
ແລະຈະທຳລາຍບັນດາລົດມ້າເສິກຂອງເຈົ້າ.[11]ເຮົາຈະກຳຈັດເມືອງໃຫ້ຫມົດໄປຈາກແຜ່ນດິນຂອງເຈົ້າ ແລະ
ທັບມ້າງທີ່ກຳບັງເຂັ້ມແຂງຂອງເຈົ້າທັງຫມົດ.
[12]ເຮົາຈະທຳລາຍມົນຄາຖາທີ່ພວກເຈົ້າໃຊ້ນັ້ນ, ແລະ ເຈົ້າຈະບໍ່ມີຫມໍດູຄົນໃດໆ ອີກຕໍ່ໄປ.[13]ເຮົາຈະທຳລາຍຮູບແກະສະລັກຂອງເຈົ້າ ແລະ
ເສົາຫີນສັກສິດທັງຫລາຍຈາກທ່າມກາງເຈົ້າ. ເຈົ້າຈະບໍ່ນະມັດສະການສິ່ງຕ່າງໆທີ່ເຈົ້າເຮັດຈາກມືຂອງເຈົ້າເອງອີກຕໍ່ໄປ.
[14]ເຮົາຈະຖອນບັນດາເສົາອາເຊຣາຂອງເຈົ້າທ່າມກາງເຈົ້າ, ແລະເຮົາຈະທຳລາຍເມືອງຕ່າງໆຂອງເຈົ້າອີກດ້ວຍ.
[15]ເຮົາຈະແກ້ແຄ້ນດ້ວຍຄວາມໂກດຮ້າຍຕໍ່ບັນດາປະຊາຊາດຊຶ່ງບໍ່ໄດ້ເຊື່ອຟັງເຮົາ."


generated on Tue Jun 17 19:01:42 2025

6 [1]ບັດນີ້ ຈົ່ງຟັງສິ່ງທີ່ພຣະຢາເວເວົ້າ, “ຈົ່ງລຸກຂຶ້ນ ແລະ ສະເຫນີຄະດີຂອງພວກເຈົ້າຕໍ່ຫນ້າພູເຂົາທັງຫລາຍ;
ຈົ່ງໃຫ້ເນີນເຂົາທັງຫລາຍຟັງສຽງຂອງພວກເຈົ້າ.[2]ພວກເຈົ້າພູເຂົາທັງຫລາຍ, ຈົ່ງຟັງການກ່າວໂທດຂອງພຣະຢາເວ ແລະ
ພວກເຈົ້າຜູ້ເປັນຮາກຖານອັນຫມັ້ນຄົງຂອງແຜ່ນດິນໂລກເອີຍ. ເພາະພຣະຢາເວຊົງມີຄະດີຄວາມກັບປະຊາຊົນຂອງພຣະອົງ,
ແລະພຣະອົງຈະສູ້ຄວາມກັບອິສະຣາເອນ."

[3]"ໂອປະຊາຊົນຂອງເຮົາ, ເຮົາໄດ້ເຮັດຫຍັງໃຫ້ແກ່ພວກເຈົ້າແນ່? ເຮົາເຮັດໃຫ້ພວກເຈົ້າລຳບາກບ່ອນໃດ? ຈົ່ງໃຫ້ການຕໍ່ເຮົາແມ!
[4]ເພາະວ່າເຮົາໄດ້ນຳພວກເຈົ້າຂຶ້ນມາຈາກແຜ່ນດິນເອຢິບ ແລະ ຊ່ວຍກູ້ພວກເຈົ້າອອກມາຈາກເຮືອນທາດ. ເຮົາໄດ້ໃຊ້ໂມເຊ, ອາໂຣນ, ແລະ
ມີຣີອາມໄປຫາພວກເຈົ້າ.[5]ໂອປະຊາຊົນຂອງເຮົາເອີຍ, ຈົ່ງຈົດຈຳສິ່ງຊົ່ວຮ້າຍຂອງບາລາດ ກະສັດໂມອາບ, ແລະ ຈົດຈຳການທີ່ບາລາອາມ
ລູກຊາຍຂອງເບອໍໄດ້ຕອບເຂົາ ໃນຂະນະທີ່ພວກເຈົ້າອອກຈາກຊິດຕີມໄປຫາກິນການ,
ເພື່ອພວກເຈົ້າຈະໄດ້ຮູ້ພຣະຣາຊະກິດອັນຊອບທັມຂອງພຣະຢາເວ."
[6]ຂ້າພຣະເຈົ້າຈະນຳອີຫຍັງເຂົ້າມາເຝົ້າພຣະຢາເວ, ເມື່ອຂ້າພຣະເຈົ້າກົ້ມກາບພຣະເຈົ້າຜູ້ສູງສຸດ?
ຂ້າພຣະເຈົ້າຄວນທີ່ຈະເຂົ້າເຝົ້າພຣະອົງດ້ວຍເຄື່ອງເຜົາບູຊາ, ດ້ວຍບັນດາລູກງົວອາຍຸຫນຶ່ງປີບໍ?[7]ພຣະຢາເວຈະພໍພຣະທັຍ
ໃນການຖວາຍແກະຜູ້ຫລາຍພັນໂຕ, ຫລື ດ້ວຍທານນ້ຳມັນຫລາຍຫມື່ນສາຍບໍ?
ຂ້າພຣະເຈົ້າຄວນທີ່ຈະຖວາຍລູກຊາຍຫົວປີເພື່ອໄຖ່ການລະເມີດຂອງຂ້າພຣະເຈົ້າ, ຄືຜົນຂອງກາຍຂອງຂ້າພຣະເຈົ້າ
ເພື່ອການຊຳຣະບາບຂອງຂ້າພຣະເຈົ້າເອງບໍ?[8]ມະນຸດເອີຍ, ພຣະອົງໄດ້ຊົງສຳແດງແກ່ພວກເຈົ້າແລ້ວວ່າແມ່ນຫຍັງດີ, ແລະ
ພຣະຢາເວຊົງປະສົງຫຍັງຈາກພວກເຈົ້າ: ໃຫ້ເຮັດສິ່ງທີ່ຍຸຕິທັມ, ຮັກຄວາມເມດຕາ, ແລະ
ດຳເນີນຊີວິດໄປກັບພຣະເຈົ້າຂອງພວກເຈົ້າດ້ວຍຄວາມຖ່ອມໃຈ.
[9]ພຣະສຸຣະສຽງຂອງພຣະຢາເວ ປະກາດແກ່ນະຄອນນັ້ນ - ເຖິງຢ່າງໃດ- ບັດນີ້ຄົນສະຫລາດຈະຮູ້ຈັກພຣະນາມຂອງພຣະອົງ:
“ຈົ່ງຣະວັງປະຊາຊົນນັ້ນເຖີນ, ແລະ ຜູ້ທີ່ໄດ້ເອົາມັນໃສ່ໄວ້ໃນທີ່ຂອງມັນ.[10]ຍັງມີຊັບສົມບັດໃນເຮືອນຂອງຄົນອະທັມທີ່ບໍ່ໄດ້ສັດຊື່, ແລະ
ມີການຄົດໂກງທີ່ຫນ້າລັງກຽດ.
[11]ຂ້າພຣະເຈົ້າຄວນທີ່ຈະພິຈາຣະນາບຸກຄົນຜູ້ໄຮ້ດຽງສາ ຖ້າເຂົາໃຊ້ຕາຊັ່ງຂີ້ໂກງ, ພ້ອມດ້ວຍຖົງທີ່ເຕັມດ້ວຍລູກຕຸ້ມຂີ້ໂກງໄດ້ບໍ?
[12]ບັນດາຄົນຮັ່ງມີຂອງນະຄອນນັ້ນ ກໍເຕັມໄປດ້ວຍຄວາມໂຫດຮ້າຍ, ແລະ ຜູ້ຢູ່ອາໄສຂອງນະຄອນນັ້ນກໍເວົ້າຂີ້ຕົວະ, ແລະ
ລີ້ນຂອງພວກເຂົາກໍເວົ້າແຕ່ຄຳຫລອກຫລວງ.
[13]ເພາະສະນັ້ນເຮົາຈະຕີພວກເຈົ້າໃຫ້ບາດເຈັບສາຫັດ, ເຮົາຈະເຮັດໃຫ້ພວກເຈົ້າຮົກຮ້າງໄປເພາະຄວາມບາບທັງຫລາຍຂອງພວກເຈົ້າ.
[14]ພວກເຈົ້າຈະກິນ ແຕ່ບໍ່ອີ່ມ; ຄວາມວ່າງເປົ່າຂອງພວກເຈົ້າຈະຍັງຄົງຢູ່ພາຍໃນໂຕພວກເຈົ້າ. ພວກເຈົ້າຈະຈັດເກັບສິນຄ້າໄວ້ແຕ່ຈະບໍ່ເຫລືອຢູ່,
ແລະສິ່ງທີ່ພວກເຈົ້າເກັບໄວ້ເຮົາຈະໃຫ້ດາບທຳລາຍເສັຽ.[15]ພວກເຈົ້າຈະຫວ່ານ ແຕ່ຈະບໍ່ໄດ້ເກັບກ່ຽວ; ພວກເຈົ້າຈະບີບຫມາກກອກເທດ
ແຕ່ຈະບໍ່ໄດ້ເຈີມໂຕພວກເຈົ້າເອງດ້ວຍນ້ຳມັນ; ພວກເຈົ້າຈະຢຽບຫມາກອະງຸ່ນ ແຕ່ຈະບໍ່ໄດ້ດື່ມເຫລົ້າອະງຸ່ນ.
[16]ພວກເຈົ້າໄດ້ຮັກສາກົດເກນທີ່ອົມຣີໄດ້ເຮັດຂຶ້ນ, ແລະ ເຮັດຕາມກິດຈະການທັງຫມົດຂອງເຊື້ອຊາດຂອງອາຮາບ.
ພວກເຈົ້າດຳເນີນການຕາມແຜນການຂອງພວກເຂົາ. ດັ່ງນັ້ນ, ເຮົາຈະເຮັດໃຫ້ພວກເຈົ້າ, ຄືເມືອງພິນາດ ແລະ ພວກເຈົ້າ
ບັນດາຜູ້ອາໄສຈະເປັນສິ່ງທີ່ເຢາະເຢີ້ຍ ແລະ ພວກເຈົ້າຈະແບກຮັບການເຢາະເຢີ້ຍຈາກປະຊາຊົນຂອງເຮົາ."


generated on Tue Jun 17 19:01:42 2025

7 [1]ວິບັດແກ່ຕົວຂ້າພຣະເຈົ້າ! ເພາະຂ້າພຣະເຈົ້າເປັນຄືການເກັບກ່ຽວຂອງຫມາກໄມ້ຣະດູຮ້ອນທີ່ຜ່ານໄປແລ້ວ, ແລະ
ເປັນຄືຜົນອະງຸ່ນທີ່ຕົກຄ້າງຈາກການເກັບກ່ຽວຜົນໃນສວນອະງຸ່ນ: ຈຶ່ງບໍ່ມີພວງອະງຸ່ນໃຫ້ກິນແລ້ວ,
ບໍ່ມີທັງຫມາກເດື່ອສຸກຄາຕົ້ນຣະດູທີ່ຕົວຂ້າພຣະເຈົ້າປາຖນາ.[2]ຄົນຈົງຮັກພັກດີຕາຍໄປຈາກແຜ່ນດິນ, ບໍ່ມີຄົນຊື່ຕົງເຫລືອຢູ່ຈັກຄົນດຽວ.
ພວກເຂົາທຸກຄົນຕ່າງກໍລໍຄອຍຈະຂ້າຟັນລັນແທງກັນ; ຕ່າງຄົນກໍຕາມລ່າພີ່ນ້ອງຂອງຕົນ.

[3]ມືຂອງພວກເຂົາເກັ່ງແຕ່ທີ່ຈະທຳຮ້າຍຄົນອື່ນ: ຜູ້ປົກຄອງຮຽກຮ້ອງແຕ່ເງິນ, ຜູ້ພິພາກສາໄຝ່ຫາແຕ່ສິນບົນ, ແລະ
ຜູ້ມີອິດທິພົນມັກເຮັດຕາມໃຈມັກ ດັ່ງນັ້ນພວກເຂົາຕ່າງຫາກກໍຄົບຄິດກັນ.[4]ຄົນດີທີ່ສຸດຂອງພວກເຂົາກໍກາຍເປັນເຫມືອນຕົ້ນຫນາມ,
ຄົນທີ່ຊື່ຕົງທີ່ສຸດກໍຊົ່ວຍິ່ງກວ່າຫນາມແຫລມ. ວັນແຫ່ງການລົງໂທດພວກເຈົ້າ ຄືວັນທີ່ບັນດາຄົນຍາມໄດ້ບອກໄວ້ລ່ວງຫນ້າ ກໍມາເຖິງແລ້ວ
ບັດນີ້ເຖິງເວລາແລ້ວທີ່ພວກເຂົາຈະສັບສົນວຸ້ນວາຍ.
[5]ຢ່າວາງໃຈເພື່ອນບ້ານຄົນໃດເລີຍ; ຢ່າຫມັ້ນໃຈມິດສະຫາຍ. ຈົ່ງຣະວັງຄຳເວົ້າຂອງທ່ານ ແມ່ນແຕ່ຜູ້ຍິງຜູ້ທີ່ຢູ່ໃນອ້ອມແຂນຂອງພວກເຈົ້າ.
[6]ເພາະວ່າລູກຊາຍດູຫມິ່ນພໍ່ຂອງເຂົາ, ລູກສາວກໍລຸກຂຶ້ນສູ້ກັບແມ່ຂອງລາວ, ແລະ ລູກໃພ້ຕໍ່ສູ້ແມ່ຍ່າ.
ສັດຕຣູຂອງເຂົາຈະເປັນຄົນໃນຄົວເຮືອນຂອງເຂົາເອງ.
[7]ແຕ່ສຳລັບຂ້າພຣະເຈົ້າ, ຂ້າພຣະເຈົ້າຈະເບິ່ງພຣະຢາເວ. ຂ້າພຣະເຈົ້າຈະເຝົ້າຄອຍພຣະເຈົ້າແຫ່ງຄວາມລອດຂອງຂ້າພຣະເຈົ້າ;
ພຣະເຈົ້າຂອງຂ້າພຣະເຈົ້າຈະຊົງຟັງຂ້າພຣະເຈົ້າ.[8]ສັດຕຣູເອີຍ, ຢ່າເຢາະເຢີ້ຍຂ້າພຣະເຈົ້າເລີຍ. ເມື່ອຂ້າພຣະເຈົ້າລົ້ມລົງ,
ຂ້າພຣະເຈົ້າຈະລຸກຂຶ້ນອີກ. ເມື່ອຂ້າພຣະເຈົ້ານັ່ງຢູ່ໃນຄວາມມືດ, ພຣະຢາເວຈະຊົງເປັນແສງສະຫວ່າງແກ່ຂ້າພຣະເຈົ້າ.
[9]ເພາະຂ້າພຣະເຈົ້າໄດ້ເຮັດບາບຕໍ່ພຣະຢາເວ, ຂ້າພຣະເຈົ້າກໍຈະທົນຮັບພຣະພິໂຣດຂອງພຣະອົງ
ຈົນກວ່າພຣະອົງພິພາກສາຄະດີຂອງຂ້າພຣະເຈົ້າ, ແລະ ຊົງຕັດສິນຄວາມເພື່ອຂ້າພຣະເຈົ້າ.
ພຣະອົງຈະຊົງນຳຂ້າພຣະເຈົ້າອອກໄປຍັງຄວາມສະຫວ່າງ, ແລະ
ຂ້າພຣະເຈົ້າຈະເຫັນການຊ່ວຍກູ້ຂອງພຣະອົງໃນຄວາມຊອບທັມຂອງພຣະອົງ.
[10]ແລ້ວສັດຕຣູຂອງຂ້າພຣະເຈົ້າຈະເຫັນ, ແລະຄວາມອັບອາຍຈະທັບຖົມຄົນຜູ້ກ່າວແກ່ຂ້າພຣະເຈົ້າ, "ພຣະຢາເວຂອງທ່ານຢູ່ໃສ?"
ຕາຂອງຂ້າພຣະເຈົ້າຈະແນມເບິ່ງນາງລົ້ມລົງ; ນາງຈະຖືກຢຽບຢູ່ໃຕ້ຝາຕີນຄືຂີ້ຕົມຢູ່ຕາມຖະຫນົນຫົນທາງ.
[11]ມື້ຫນຶ່ງທີ່ຈະສ້າງກຳແພງເມືອງຂອງພວກເຈົ້າຈະມາຮອດ; ໃນວັນນັ້ນເຂດແດນຂອງພວກເຈົ້າຈະຂະຫຍາຍອອກໄປໄກຫລາຍ.
[12]ໃນວັນນັ້ນປະຊາຊົນຈະມາຫາພວກເຈົ້າ, ຈາກອັດຊີເຣັຽ ແລະເມືອງຕ່າງໆຂອງອີຢິບ, ແລະຈາກອີຢິບຈົນຮອດແມ່ນ້ຳ, ແມ່ນ້ຳເອີຟຣັດ,
ຈາກທະເລເຖິງທະເລ, ແລະ ຈາກພູເຂົາຈົນເຖິງພູເຂົາ.
[13]ແຕ່ແຜ່ນດິນຈະຖືກຖິ້ມຮ້າງເປົ່າວ່າງເພາະຄົນທີ່ຢູ່ອາໄສທີ່ນັ້ນບັດນີ້ເປັນເຫດເນື່ອງດ້ວຍຜົນການກະທຳຂອງພວກເຂົາ.
[14]ຂໍຊົງລ້ຽງດູປະຊາຊົນຂອງພຣະອົງ, ຄືລ້ຽງແກະດ້ວຍໄມ້ແສ້ຂອງພຣະອົງ, ຝູງແກະທີ່ເປັນມໍຣະດົກຂອງພຣະອົງ.
ຜູ້ອາໄສຢ່າງໂດດດ່ຽວໃນປ່າຣົກ, ໃນທ່າມກາງທົ່ງຫຍ້າອຸດົມສົມບູນຂໍໃຫ້ເຂົາເລັມຫຍ້າຢູ່ໃນບາຊານ ແລະກີເລອາດຢ່າງໃນໂບຮານນະການ.
[15]ດັ່ງໃນສະໄຫມເມື່ອພວກເຈົ້າອອກຈາກແຜ່ນດິນອີຢິບ, ເຮົາຈະໃຫ້ພວກເຈົ້າເຫັນສິ່ງອັດສະຈັນຕ່າງໆ.
[16]ບັນດາປະຊາຊົນຈະເຫັນແລ້ວອັບອາຍໃນອຳນາດທັງສິ້ນຂອງພວກເຂົາ. ພວກເຂົາຈະເອົາມືປິດປາກພວກເຂົາໄວ້;
ຫູຂອງພວກເຂົາຈະຫນວກໄປ.[17]ພວກເຂົາຈະລີເລຍຂີ້ຝຸ່ນເຫມືອນງູ, ເຫມືອນສັດທີ່ເລືອຄານໃນໂລກ.
ພວກເຂົາຈະອອກມາຈາກຖ້ຳຂອງພວກເຂົາດ້ວຍຄວາມຢ້ານກົວ; ພວກເຂົາຈະອອກມາຫາດ້ວຍຄວາມຢຳເກງພຣະອົງ, ພຣະຢາເວ
ພຣະເຈົ້າຂອງພວກເຮົາ, ແລະ ພວກເຂົາຈະຢ້ານເຫດເພາະພຣະອົງ.
[18]ໃຜຈະເປັນພຣະເຈົ້າເຫມືອນພຣະອົງ, ຜູ້ຊົງອະພັຍບາບ, ແລະ
ຊົງເບິ່ງຂ້າມການທໍຣະຍົດຂອງຄົນທີ່ເຫລືອຢູ່ອັນເປັນມໍຣະດົກຂອງພຣະອົງບໍ? ພຣະອົງຊົງບໍ່ຮັກສາພຣະພິໂຣດເປັນນິດ,
ເພາະພຣະອົງປິຕິຍິນດີໃນພັນທະສັນຍາອັນສັດຊື່ຂອງພຣະອົງ.
[19]ພຣະອົງຈະຊົງເມດຕາແກ່ພວກເຮົາອີກ; ຈະຊົງຢຽບຄວາມຜິດທັງຫລາຍຂອງພວກເຮົາໄວ້ໃຕ້ພຣະບາດຂອງພຣະອົງ.
ພຣະອົງຈະຊົງດຶກບາບທັງຫມົດຂອງພວກເຂົາລົງໄປໃນທະເລເລິກ.[20]ພຣະອົງຈະຊົງສຳແດງຄວາມຈິງຕໍ່ຢາໂຄບ ແລະ
ຄວາມຮັກຫມັ້ນຄົງຕໍ່ອັບຣາຮາມ, ດັ່ງທີ່ພຣະອົງຊົງປະຕິຍານຕໍ່ບຸດຂອງເຮົາ ຕັ້ງແຕ່ສະໄຫມບູຮານນະການ.

# ນາຮູມ

1 [1]ຄຳໂອວາດກ່ຽວກັບເມືອງນີເນເວ. ຫນັງສືເລື່ອງນິມິດຂອງນາຮູມ, ຊາວແອນໂກດ.

[2]ພຣະຢາເວຊົງເປັນພຣະເຈົ້າຜູ້ຊົງຫວງແຫນ ແລະ ແກ້ແຄ້ນ; ພຣະຢາເວຊົງແກ້ແຄ້ນ ແລະ ເຕັມໄປດ້ວຍຄວາມໂກດຮ້າຍ;
ພຣະຢາເວຊົງແກ້ແຄ້ນຜູ້ທີ່ຂັດຂວາງຂອງພຣະອົງ, ແລະ ພຣະອົງສືບຕໍ່ຄວາມໂກດຮ້າຍຂອງພຣະອົງຕໍ່ພວກສັດຕູຂອງພຣະອົງ.[3]ພຣະຢາເວ
ຊ້າທີ່ຈະໂກດຮ້າຍ ແລະ ມີຣິດທານຸພາບຍິ່ງໃຫຍ່; ພຣະອົງຈະບໍ່ໄດ້ປະກາດວ່າສັດຕູຂອງພຣະອົງເປັນຜູ້ໄຮ້ດຽງສາ.
ພຣະຢາເວຊົງດຳເນີນໃນພາຍຸລົມຫມູນ ແລະ ພາຍຸ, ແລະ ເມກເປັນຂີ້ຝຸ່ນໃຕ້ພຣະບາດຂອງພຣະອົງ.
[4]ພຣະອົງຊົງຫ້າມນ້ຳທະເລ ແລະ ເຮັດໃຫ້ມັນແຫ້ງໄປ; ພຣະອົງຊົງເຮັດໃຫ້ແມ່ນ້ຳລຳເຊທັງຫລາຍບົກແຫ້ງໄປ. ບາຊານກໍຫ່ຽວແຫ້ງໄປ, ແລະ
ລວມພູກາເມນກໍຫ່ຽວແຫ້ງໄປເຊັ່ນກັນ; ດອກໄມ້ຢູ່ເທິງພູເລບານອນກໍຫ່ຽວແຫ້ງໄປ.[5]ບັນດາພູເຂົາກໍສັ່ນສະເທືອນຕໍ່ພຣະພັກພຣະອົງ, ແລະ ບັນ-
ດາເນີນພູກໍເປື່ອຍໄປ; ແຜ່ນດິນກໍພັງທະລາຍລົງຕໍ່ພຣະພັກພຣະອົງ, ແທ້ຈິງແລ້ວ, ທົ່ວທັງໂລກ ແລະ ຄົນທັງຫມົດທີ່ອາໄສຢູ່ໃນໂລກດ້ວຍ.
[6]ໃຜຈະຕ້ານທານຕໍ່ພຣະພິໂຣດຂອງພຣະອົງໄດ້? ໃຜຈະທົນຕໍ່ຄວາມຮ້ອນແຮງແຫ່ງຄວາມໂກດຮ້າຍຂອງພຣະອົງໄດ້? ພຣະພິໂຣດຂອງພຣະອົງ
ພົ່ນອອກມາເຫມືອນໄຟ ແລະ ພຣະອົງຊົງເຮັດໃຫ້ຫີນດານທັງຫລາຍແຕກໄປ.


generated on Tue Jun 17 19:01:42 2025

[7]ພຣະຢາເວຊົງປະເສີດ, ເປັນບ່ອນກຳບັງອັນເຂັ້ມແຂງໃນວັນທີ່ຍາກລຳບາກ; ແລະ ພຣະອົງຊົງສັດຊື່ຕໍ່ຄົນເຫລົ່ານັ້ນ ທີ່ເຂົ້າມາລີ້ໄພໃນພຣະອົງ.
[8]ແຕ່ພຣະອົງຈະທຳລາຍສັດຕູຂອງພຣະອົງໃຫ້ສິ້ນໄປດ້ວຍນ້ຳຖ້ວມອັນແຮງ; ພຣະອົງໄລ່ພວກເຂົາເຂົ້າໄປໃນຄວາມມືດ.
[9]ພວກທ່ານຄິດອຸບາຍອັນໃດຕໍ່ສູ້ພຣະຢາເວ? ພຣະອົງຊົງທຳລາຍໃຫ້ກ້ຽງ; ບັນຫາຄວາມທຸກຍາກຈະບໍ່ເກີດຂຶ້ນອີກ ເປັນຄັ້ງທີສອງ.[10]ເຖິງ-
ວ່າພວກເຂົາຈະຫຍຸ້ງພັນກັນໄປຫມົດ ຄືດັ່ງເຄືອຫນາມພັນກ້ຽວກັນ; ພວກເຂົາຈະເມົາເຫລົ້າດ້ວຍເຄື່ອງດື່ມຂອງເຂົາເອງ; ພວກເຂົາຈະຖືກໄຟ
ເຜົາໄປຈົນຫມົດສິ້ນເຫມືອນຕໍເຟືອງແຫ້ງ.[11]ບາງຄົນໄດ້ຂຶ້ນມາທ່າມກາງພວກທ່ານ, ນີເນເວ, ຜູ້ທີ່ຄິດແຜນການຊົ່ວຮ້າຍຕໍ່ສູ້ພຣະຢາເວ,
ຜູ້ທີ່ສະຫນັບສະຫນູນຄວາມຊົ່ວຮ້າຍ.
[12]ພຣະຢາເວກ່າວດັ່ງນີ້ວ່າ, "ແມ່ນວ່າພວກເຂົາຈະມີກຳລັງຄົບຖ້ວນ ແລະ ມີຈຳນວນຄົນຫລວງຫລາຍ, ພວກເຂົາກໍຈະຖືກດັບສູນໄປ;
ຄົນຂອງພວກເຂົາຈະສູນສິ້ນໄປ. ແຕ່ເຈົ້າ, ຢູດາ: ແມ່ນວ່າເຮົາຈະເຮັດໃຫ້ເຈົ້າມີຄວາມທຸກໃຈ, ເຮົາກໍຈະບໍ່ເຮັດໃຫ້ເຈົ້າມີຄວາມທຸກອີກຕໍ່ໄປ.
[13]ບັດນີ້ ເຮົາຈະທຳລາຍແອກຂອງພວກເຂົາອອກຈາກເຈົ້າ; ເຮົາຈະທຳລາຍໂສ້ທັງຫລາຍຂອງເຈົ້າໄປເສຍ."
[14]ພຣະຢາເວໄດ້ອອກຄຳສັ່ງກ່ຽວກັບເຈົ້າວ່າ, ນີເນເວ: “ເຈົ້າຈະບໍ່ມີເຊື້ອສາຍທີ່ໃຊ້ຊື່ຕາມຊື່ຂອງເຈົ້າອີກຕໍ່ໄປ. ເຮົາຈະທຳລາຍຮູບທີ່ແກະສະຫລັກ
ແລະ ຮູບຫລໍ່ໂລຫະໄປຈາກວິຫານຂອງພະເຈົ້າຂອງເຈົ້າ. ເຮົາຈະຂຸດຂຸມຝັງສົບໃຫ້ແກ່ເຈົ້າ, ເພາະວ່າເຈົ້າຊົ່ວຊ້າ.”
[15]ເບິ່ງແມ, ເທິງພູເຂົາມີຕີນຂອງຜູ້ນຳຂ່າວປະເສີດມາ ຜູ້ປະກາດສັນຕິພາບ! ຢູດາເອີຍ ຈົ່ງຈັດງານເທດສະການ, ແລະ
ຮັກສາຄຳສາບານຂອງເຈົ້າ, ເພາະຄົນຊົ່ວຈະບໍ່ມາຫາເຈົ້າອີກ; ພວກເຂົາຖືກກຳຈັດໄປໝົດສິ້ນແລ້ວ.


generated on Tue Jun 17 19:01:42 2025

2 1ຜູ້ທຳລາຍເຈົ້າໃຫ້ພິນາດກຳລັງຈະເຂົ້າມາຕໍ່ສູ້ເຈົ້າແລ້ວ. ຈົ່ງເຂົ້າປະຈຳການທີ່ກຳແພງເມືອງ, ຈົ່ງເຝົ້າເສັ້ນທາງໄວ້, ຈົ່ງ
ເຮັດໃຫ້ຕົນເອງເຂັ້ມແຂງ, ແລະ ຈົ່ງລວມກອງທັບຂອງເຈົ້າໄວ້. 2ເພາະວ່າພຣະຢາເວຟື້ນຟູຄວາມຮຸ່ງເຮືອງຂອງຢາໂຄບ, ຄືກັບ
ຄວາມຮຸ່ງເຮືອງຂອງອິດສະຣາເອນ, ແມ່ນວ່າພວກໂຈນໄດ້ທຳລາຍລ້າງພວກເຂົາ ແລະ ທຳລາຍເຄືອອະງຸ່ນທັງຫລາຍຂອງພວກເຂົາໄປ.

3ໂລ່ຂອງທະຫານຂອງເຂົາເປັນສີແດງ, ແລະນັກຮົບຜູ້ກ້າທັງຫລາຍນຸ່ງເຄື່ອງສີແດງເຂັ້ມ; ໂລຫະທີ່ຢູ່ລົດມ້າຮົບທັງຫລາຍ ກໍສ່ອງແສງເຫລື້ອມ
ໃນວັນທີ່ມັນຖືກກຽມພ້ອມ, ແລະ ຫອກໄມ້ສົນສີດາຖືກແກວ່ງໄປມາໃນອາກາດ. 4ລົດມ້າຮົບແລ່ນໄປຕາມຖະຫນົນຢ່າງໄວວາ; ພວກມັນແລ່ນ
ຢ່າງໄວວາ ກັບໄປມາໃນຖະໜົນທີ່ກວ້າງຂວາງເຫມືອນເຊື້ອໄຟ, ແລະ ເຫມືອນກັບສາຍຟ້າແມບ.
5ຜູ້ທີ່ທຳລາຍເຈົ້າໃຫ້ພິນາດເອີ້ນເອົາທະຫານຂອງເຂົາມາ; ພວກເຂົາກໍສະດຸດກັນແລະກັນລົ້ມລົງໃນຂະນະທີ່ເດີນໄປ; ພວກເຂົາຟ້າວໂຈມຕີ
ເຂົ້າກຳແພງເມືອງ. ມີການຈັດກຳລັງຂະຫນາດໃຫ່ຍ ເພື່ອປ້ອງກັນພວກຜູ້ໂຈມຕີເຫລົ່ານີ້.
6ປະຕູທີ່ແມ່ນ້ຳທັງຫລາຍເປີດອອກ, ແລ້ວຣາຊະວັງກໍພັງທະລາຍລົງ. 7ຮັດແຊບຈະຖືກເປືອຍກາຍຢູ່ ແລະ ໄດ້ຖືກພາຕົວໄປ; ບັນດາສາວໃຊ້ຂອງ
ນາງຮ້ອງໄຫ້ຄວນຄາງຄືສຽງນົກກາງແກ, ຈະຕີເອິກຂອງພວກເຂົາເອງ.
8ນີເນເວກໍເຫມືອນສະນ້ຳຮົ່ວ, ໂດຍທີ່ຜູ້ຄົນຕ່າງຫນີໄປເຫມືອນນ້ຳພຸພັງອອກມາ. ຄົນອື່ນໆຕ່າງກໍຮ້ອງວ່າ “ຢຸດ, ຢຸດ,” ແຕ່ກໍບໍ່ມີໃຜຫລຽວຫລັງ
ກັບ. 9ຈົ່ງປຸ້ນເອົາເງິນເຖິດ, ຈົ່ງປຸ້ນເອົາຄຳໄປ, ເພາະມັນບໍ່ສິ້ນສຸດ, ຄວາມຄວາມຮຸ່ງເຮືອງຄືເຄື່ອງລ້ຳຄ່າກໍບໍ່ມີອີກແລ້ວ. 10ນີເນເວຮ້າງເປົ່າ ແລະ
ມ້າງເພໄປແລ້ວ. ຈິດໃຈຂອງທຸກຄົນກໍສະຫລາຍໄປ, ຫົວເຂົ່າທັງຫລາຍກໍພັບລົງ, ແລະທຸກຄົນຕ່າງກໍເຈັບປວດໄປຫມົດ; ໃບຫນ້າຂອງທຸກຄົນກໍ
ຊີດໄປ.
11ບັດນີ້ຖ້ຳສິງ, ຊຶ່ງເປັນບ່ອນລ້ຽງລູກຂອງໂຕສິງ, ບ່ອນຢູ່ອາໄສຂອງສິງໂຕຜູ້ ແລະໂຕແມ່ ເຄີຍເດີນທາງກັບລູກໆຂອງມັນ, ເປັນບ່ອນ
ທີ່ພວກມັນບໍ່ຢ້ານສິ່ງໃດ? 12ສິງໂຕນັ້ນໄດ້ຈີກອາຫານໃຫ້ພຽງພໍສຳລັບລູກຂອງມັນເປັນຕ່ອນໆ ເພື່ອໃຫ້ລູກໆຂອງມັນກິນ; ມັນໄດ້ຄາບຄໍເຫຍື່ອ
ມາໃຫ້ພວກສິງໂຕແມ່ທັງຫລາຍ, ແລະ ສະສົມຊີ້ນໄວ້ຈົນເຕັມຖ້ຳຂອງມັນ, ໃນຖ້ຳຂອງມັນມີຊາກສັດທີ່ຈີກຂາດເປັນຕ່ອນໆ.
13ພຣະຢາເວຈອມໂຍທາປະກາດວ່າ, "ເບິ່ງແມ ເຮົາຕໍ່ສູ້ເຈົ້າ, ເຮົາຈະເຜົາລົດມ້າຮົບຂອງເຈົ້າໃຫ້ເປັນຄວັນໄຟ, ແລະ ຄົມດາບຈະສັງຫານ
ສິງຫນຸ່ມຂອງເຈົ້າ. ເຮົາຈະເອົາຂອງທີ່ເຈົ້າທີ່ປຸ້ນມາຈາກແຜ່ນດິນຂອງເຈົ້າ, ແລະ ຈະບໍ່ມີໃຜໄດ້ຍິນສຽງຂອງຜູ້ສື່ງຂ່າວຂອງເຈົ້າອີກຕໍ່ໄປ."


generated on Tue Jun 17 19:01:42 2025

3 [1]ວິບັດແກ່ເມືອງທີ່ເຕັມໄປດ້ວຍເລືອດ! ເຕັມໄປດ້ວຍການເວົ້າຂີ້ຕົວະ ແລະ ຊັບສິນບັດທີ່ປຸ້ນມາທັງສິ້ນ;
ມີຄົນທີ່ຕົກເປັນເຫຍື່ອໃນເມືອງນັ້ນສະເຫມີ.[2]ແຕ່ບັດນີ້ມີສຽງຂອງໄມ້ແສ້ ແລະສຽງອຶກກະທຶກຂອງກົງລໍ້, ກັບຝູງມ້າທີ່ກຳລັງແລ່ນໄປ, ແລະ
ລົດມ້າຮົບທັງຫລາຍທີ່ກຳລັງແລ່ນເຕັ້ນໄປ.

[3]ຍັງມີຄົນຂີ່ມ້າທີ່ພ້ອມໂຈມຕີ, ດາບເຫລື້ອມ, ຫອກປະກາຍ, ຊາກສົບກອງສູງຂຶ້ນຫລາຍມະຫາສານ, ຮ່າງຄົນຕາຍບໍ່ຮູ້ຈັກຫມົດ; ຜູ້ໂຈມຕີພວກ-
ເຂົາຈະສະດຸດຊາກສົບທັງຫລາຍນັ້ນ.[4]ສິ່ງນີ້ເກີດຂຶ້ນ ເພາະພຶດຕິກຳທີ່ເຕັມໄປດ້ວຍລາຄະຕັນຫາ ຂອງຍິງໂສເພນີທີ່ສວຍງາມ,
ຜູ້ຊຳນານການໃຊ້ເວດມົນຄາຖາ, ຜູ້ຂາຍປະຊາຊາດຜ່ານການເປັນໂສເພນີຂອງນາງ, ແລະ
ປະຊາຊົນກໍຜ່ານການກະທຳແຫ່ງການໃຊ້ເວດມົນຂອງນາງ.
[5]"ເບິ່ງແມ, ເຮົາຈະຕໍ່ສູ້ເຈົ້າ - ພຣະຢາເວຈອມໂຢທາໄດ້ກ່າວດັ່ງນີ້ - ເຮົາຈະຮື້ກະໂປ່ງເຈົ້າຄຸມຫນ້າຂອງເຈົ້າ ແລະ ໃຫ້ບັນດາປະຊາຊາດໄດ້ເຫັນ
ຄວາມເປືອຍກາຍຂອງເຈົ້າ, ແລະ ໃຫ້ຣາຊອານາຈັກທັງຫລາຍເຫັນຄວາມອັບອາຍຂອງເຈົ້າ.[6]ເຮົາຈະໂຍນສິ່ງເປິເປື້ອນອັນຫນ້າລັງກຽດໃສ່ເຈົ້າ,
ແລະ ເຮັດໃຫ້ເຈົ້າຊົ່ວຊ້າ. ເຮົາຈະເຮັດໃຫ້ເຈົ້າຖືກຄົນປະຈານ.[7]ສິ່ງນີ້ຈະເກີດຂຶ້ນຄືທຸກຄົນທີ່ແນມເຫັນເຈົ້າກໍຈະປົບຫນີໄປໄກຈາກເຈົ້າ ແລະກ່າວ
ວ່າ, 'ນີເນເວເປັນເມືອງຮົກຮ້າງແລ້ວ; ໃຜຈະຮ້ອງໄຫ້ສົງສານເຈົ້າ?' ເຮົາຈະໄປຊອກຫາຜູ້ໃດມາປອບໃຈເຈົ້າໄດ້?"
[8]ນີເນເວເອີຍ, ເຈົ້າດີກວ່າເມືອງເທເບັດບໍ, ເມືອງນີ້ຕັ້ງຢູ່ລະຫວ່າງແມ່ນ້ຳໄນ, ຊຶ່ງມີນ້ຳອ້ອມຮອບເມືອງ, ມີທະເລເປັນທີ່ກຳບັງ, ມີທະເລເປັນກຳແພງ
ເມືອງບໍ?[9]ເອທີໂອເປຍ ແລະ ເອຢິບເປັນກຳລັງຂອງເມືອງນີ້ ແລະ ມັນບໍ່ມີສິ້ນສຸດດ້ວຍ; ເມືອງພຸດ ແລະ ເມືອງລີ-
ເບຍເປັນພັນທະມິດຂອງເມືອງນັ້ນ.
[10]ເຖິງປານນັ້ນ ເມືອງເທເບັດກໍຍັງຖືກກວາດໄປ; ນາງຕົກໄປເປັນຊະເລີຍ, ລູກນ້ອຍໆຂອງນາງກໍຖືກໂຍນລົງ ແຕກອອກເປັນຕ່ອນໆໆ ເທິງຖະຫນົນ
ທຸກເສັ້ນ, ສັດຕູຂອງນາງຈັບສະຫລາກຖືກຜູ້ທີ່ມີກຽດໃນເມືອງນີ້, ແລະ ຄົນໃຫຍ່ທັງຫມົດໄດ້ຂອງເມືອງນັ້ນກໍຖືກລ່າມໂສ້.[11]ເຈົ້າ
ກໍຍັງຈະເມົາມາຍ; ເຈົ້າພະຍາຍາມຫລົບຊ້ອນ, ແລະ ເຈົ້າຈະຊອກຫາບ່ອນທີ່ລີ້ໄພຈາກສັດຕູຂອງເຈົ້າ.
[12]ກຳແພງເມືອງທັງຫມົດຂອງເຈົ້າຈະເປັນເຫມືອນຕົ້ນຫມາກເດື່ອເທດ: ມີຫມາກເດື່ອເທດສຸກລຸ້ນທຳອິດ, ຖ້າພວກມັນຖືກສັ່ນ, ພວກມັນຈະຕົກລົງ
ໄປໃນປາກຂອງຜູ້ທີ່ກິນ.[13]ເບິ່ງແມ, ປະຊາຊົນທີ່ຢູ່ທ່າມກາງເຈົ້າເປັນພວກຜູ້ຍິງ; ບັນດາປະຕູເມືອງແຫ່ງແຜ່ນດິນຂອງເຈົ້າກໍເປີດກວ້າງໃຫ້ພວກ
ສັດຕູຂອງເຈົ້າ; ໄຟໄດ້ໄຫມ້ກືນກິນລູກດານປະຕູຂອງເຈົ້າຫມົດແລ້ວ.
[14]ຈົ່ງໄປເອົານ້ຳໄວ້ເພາະຈະຖືກປິດລ້ອມໂຈມຕີ; ຈົ່ງເສີມກຳລັງກຳແພງເມືອງຂອງເຈົ້າ; ຈົ່ງລົງໄປໃນບໍ່ດິນຫນຽວ; ຢຽບປູນໃຫ້ເຂົ້າກັນ; ຈົ່ງແປງ
ເຕົາໄຟເຜົາດິນຈີ່ໃຫ້ແຂງແຮງຂຶ້ນ.[15]ໄຟຈະໄໝ້ເຈົ້າທີ່ນັ້ນ, ແລະ ດາບຈະຂ້າເຈົ້າ. ມັນຈະກິນເຈົ້າເຫມືອນຕັກແຕນອ່ອນກືນກິນທຸກຢ່າງ.
ຈົ່ງເພີ່ມໃຫ້ຫລາຍຂຶ້ນເຫມືອນຕັກແຕນທີ່ໃຫຍ່ເຕັມໂຕແລ້ວ.
[16]ເຈົ້າໄດ້ເພີ່ມຈຳນວນພໍ່ຄ້າໃຫ້ທະວີຫລາຍຂຶ້ນ ກວ່າດວງດາວທັງຫລາຍໃນທ້ອງຟ້າ; ແຕ່ພວກມັນກໍເຫມືອນຕັກແຕນອ່ອນ:
ພວກເຂົາປຸ້ນແຜນດິນແລ້ວກໍຫນີໄປ.[17]ພວກຜູ້ປົກຄອງຂອງເຈົ້າກໍເຫມືອນຕັກແຕນ, ທີ່ໃຫຍ່ເຕັມທີ່ແລ້ວ ແລະ ພວກນາຍທະຫານຂອງເຈົ້າເປັນ
ເຫມືອນຝູງຕັກແຕນທີ່ເກາະຮົ້ວໃນມື້ອາກາດເຢັນຫນາວ. ເມື່ອດວງອາທິດຂຶ້ນ ພວກມັນກໍບິນຫນີໄປຫມົດ ບໍ່ມີໃຜຮູ້ວ່າມັນໄປໃສ.
[18]ກະສັດແຫ່ງອັດຊີເຣຍເອີຍ, ບັນດາຜູ້ລ້ຽງແກະຂອງເຈົ້ານອນຫລັບແລ້ວ; ຜູ້ປົກຄອງຂອງເຈົ້າກໍນອນລົງພັກຜ່ອນ.
ປະຊາຊົນຂອງເຈົ້າກໍກະແຈກກະຈາຍຢູ່ເທິງພູສູງ, ແລະ ບໍ່ມີຜູ້ໃດຮວບຮວມພວກເຂົາໄດ້.[19]ບໍ່ມີບາດແຜໃດຂອງເຈົ້າ ຈະສາມາດປິ່ນ-
ປົວໃຫ້ຫາຍດີໄດ້, ບາດແຜຂອງເຈົ້ານັ້ນສາຫັດຫລາຍ. ຄົນທັງປວງທີ່ໄດ້ຍິນຂ່າວກ່ຽວກັບເຈົ້າ ຈະຕົບມືເຍາະເຍີ້ຍເຈົ້າ,
ໃຜຈະລອດພົ້ນຈາກຄວາມໂຫດຮ້າຍຢ່າງຕໍ່ເນື່ອງຂອງເຈົ້າໄດ້?

# ຮາບາກຸກ

1 [1]ນີ້ແມ່ນຖ້ອຍຄຳຂອງຜູ້ປະກາດພຣະທັມ ຮາບາກຸກ ທີ່ໄດ້ຮັບຈາກພຣະຜູ້ເປັນເຈົ້າ,[2]ໂອ ພຣະຢາເວ,
ຂ້ານ້ອຍຈະຕ້ອງຮ້ອງຂໍຄວາມຊ່ອຍເຫລືອຈາກພຣະອົງອີກດົນປານໃດ, ແລະ ພຣະອົງຈຶ່ງຈະຮັບຟັງຂ້ານ້ອຍ?
ຂ້ານ້ອຍໄດ້ຮ້ອງຂໍຄວາມຊ່ວຍເຫລືອໃຫ້ພົ້ນຈາກການທຳລາຍ, 'ອັນໂຫດຮ້າຍ!' ແຕ່ພຣະອົງຈະບໍ່ຊ່ວຍຂ້ານ້ອຍໃຫ້ປອດພັຍ.

[3]ເປັນຫຍັງພຣະອົງ ຈຶ່ງຊົງເຮັດໃຫ້ຂ້ານ້ອຍພົບພໍ້ກັບຄວາມທຸກຍາກລຳບາກ ແລະການຊົ່ວຊ້າເຊັ່ນນີ້? ການທຳລາຍ
ແລະການເຂັ່ນຂ້າທາລຸນຢູ່ຕໍ່ຫນ້າຂ້ານ້ອຍ; ການສູ້ຮົບຕົບຕີ ແລະການຜິດຖຽງກັນມີຢູ່ທຸກຫົນທຸກແຫ່ງ.[4]ກົດຫມາຍຂາດຄວາມສັກສິດ, ແລະ
ຄວາມຍຸຕິທັມບໍ່ເຄີຍມີເລີຍ. ຄົນຊົ່ວຈຶ່ງໃຊ້ອຳນາດຂົ່ມເຫັງຄົນດີ; ໂດຍບິດເບືອນຄວາມຍຸຕິທັມ. ແລ້ວພຣະຢາເວຊົງຕອບ ຮາບາກຸກວ່າ
[5]"ຈົ່ງເບິ່ງຊົນຊາດທັງຫລາຍອ້ອມແອ້ມເຈົ້າ; ເຈົ້າຈະປະຫລາດໃຈຕໍ່ສິ່ງທີ່ເຈົ້າເຫັນ! ເພາະວ່າ ເຮົາຈະໃຫ້ບາງສິ່ງເກີດຂຶ້ນໃນສະໄຫມຂອງເຈົ້າ
ຊຶ່ງເຈົ້າຈະບໍ່ເຊື່ອສິ່ງທີ່ຕົນໄດ້ຍິນ.[6]ເບິ່ງແມ! ເຮົາພວມນຳຊາວເຄເດັຽ—ຄືພວກທີ່ໂຫດຮ້າຍ ແລະໃຈຮ້ອນມາໃຫ້ມີອຳນາດ—
ພວກເຂົາກຳລັງອອກໄປຍຶດ ແລະ ຄອບຄອງປະເທດທັງຫລາຍທົ່ວໂລກ.[7]ພວກເຂົາກຳລັງສ້າງຄວາມຢ້ານກົວ ແລະຄວາມອິນລະຫົນຂຶ້ນທົ່ວໄປ;
ໂດຍເປັນຜູ້ອອກກົດຫມາຍ ແລະໃຊ້ກົດຫມາຍເອງ.
[8]ມ້າຂອງພວກມັນແລ່ນໄວກວ່າເສືອດາວ, ໄວກວ່າຫມາປ່າທີ່ອອກລ່າເຫຍື່ອຕອນກາງຄືນ. ກີບຕີນມ້າຂອງພວກເຂົາກະທືບພື້ນດິນ, ແລະ
ທະຫານຂອງພວກເຂົາຂີ່ມ້າຫອບມາແຕ່ໄກ—ບິນເຫມືອນແຫລວເຈີດໄປກິນເຫຍື່ອ.[9]ກອງທັບຂອງພວກເຂົາບຸກເຂົ້າຄອບຄອງຢ່າງຮ້າຍກາດ;
ເມື່ອມັນບຸກເຂົ້າມາໃກ້ ທຸກຄົນກໍຢ້ານກົວຕົວສັ່ນຈົນຂວັນເສັຽ, ແລະຊະເລີຍທີ່ພວກເຂົາຈັບໄດ້ມີຫລາຍເຫມືອນດັ່ງເມັດຊາຍ.
[10]ພວກເຂົາຫມິ່ນປະຫມາດບັນດາກະສັດ ແລະຫົວເຍາະເຍີ້ຍໃສ່ບັນດາຜູ້ປົກຄອງ. ພວກເຂົາຫົວຂວັນໃສ່ປ້ອມປ້ອງກັນ,
ໂດຍກອງດິນຂຶ້ນໃຫ້ສູງເທົ່າປ້ອມ ແລະກໍເຂົ້າຍຶດຄອງ.[11]ເມື່ອຍຶດໄດ້ແລ້ວ ພວກເຂົາກໍກວາດເອົາສິ່ງຂອງໄປຫມົດເຫມືອນລົມພັດຜ່ານເອົາໄປ;
ຄົນພວກນີ້ບູຊາອຳນາດຂອງຕົນເອງ, ຜູ້ທີ່ເຂັ້ມແຂງເປັນພຣະເຈົ້າຂອງພວກເຂົາ.” ແລ້ວຮາບາກຸກໄດ້ຖາມພຣະຢາເວວ່າ
[12]"ພຣະຢາເວ, ພຣະເຈົ້າຂອງຂ້ານ້ອຍ, ອົງບໍຣິສຸດຂອງຂ້ານ້ອຍ? ພວກເຮົາຈະບໍ່ຕາຍ. ພຣະຢາເວ ໄດ້ແຕ່ງຕັ້ງພວກເຂົາເພື່ອຕັດສິນ,
ພຣະເຈົ້າແລະພຣະຜູ້ເປັນທີ່ກຳບັງເຂັ້ມແຂງຂອງຂ້ານ້ອຍເອີຍ, ພຣະອົງໄດ້ສະຖາປະນາພວກເຂົາເພື່ອການແກ້ໄຂ.


generated on Tue Jun 17 19:01:42 2025

[13]ສາຍຕາຂອງພຣະອົງບໍລິສຸດ ເກີນກວ່າທີ່ຈະເບິ່ງຄວາມຊົ່ວຮ້າຍ, ແລະພຣະອົງບໍ່ສາມາດເບິ່ງການກະທຳຜິດ ດ້ວຍຄວາມຊອບພຣະທັຍໄດ້;
ດ້ວຍເຫດໃດພຣະອົງຈຶ່ງຊົງຊື່ນຊອບ ບັນດາຄົນເຫລົ່ານັ້ນທີ່ທໍຣະຍົດບໍ? ດ້ວຍເຫດໃດພຣະອົງຈຶ່ງຊົງມິດງຽບຢູ່
ໃນເມື່ອພວກເຂົາທຳລາຍປະຊາຊົນຜູ້ທີ່ຊອບທັມກວ່າພວກເຂົາ?[14]ພຣະອົງເຮັດໃຫ້ຜູ້ຄົນເປັນເຫມືອນປາໃນທະເລ,
ເຫມືອນສິ່ງຕ່າງໆທີ່ເລືອຍຄານໄປ ໂດຍປາສະຈາກຜູ້ຄອບຄອງເຫນືອພວກມັນ.
[15]ພວກເຂົາຈັບຄົນເຫລົ່ານັ້ນທັງຫມົດຂຶ້ນມາດ້ວຍເບັດຕຶກປາ; ພວກເຂົາເອົາມອງກວາດເອົາປະຊາຊົນ ແລະຂັງພວກເຂົາໄວ້ໃນກົງ.
ນີ້ເປັນສາເຫດທີ່ພວກເຂົາຊື່ນຊົມຍິນດີ ແລະໂຮ¬ຮ້ອງຢ່າງຊື່ນບານ.[16]ດ້ວຍເຫດນີ້ ພວກເຂົາຈຶ່ງຖວາຍເຄື່ອງບູຊາແກ່ມອງຂອງພວກເຂົາ,
ແລະເຜົາຖວາຍເຄື່ອງຫອມບູຊາແກ່ມອງຂອງພວກເຂົາ, ເພາະສັດໂຕອ້ວນພີເປັນສ່ວນແບ່ງຂອງພວກເຂົາ, ແລະ
ຊີ້ນຕິດໄຂມັນເປັນອາຫານຂອງພວກເຂົາ.[17]ດ້ວຍເຫດນີ້ພວກເຂົາຈະໃຊ້ມອງອັນເປົ່າຫວ່າງ ແລະສືບຕໍ່ຂ້າຟັນຊົນຊາດຕ່າງໆ,
ຢ່າງບໍ່ມີຄວາມເມດຕາແບບນີ້ຕະຫລອດໄປບໍ?

 generated on Tue Jun 17 19:01:42 2025

2 [1]ຂ້ານ້ອຍຈະຂຶ້ນໄປຢືນ ແລະ ເຂົ້າປະຈຳທີ່ຫໍຄອຍ, ແລະ ແລ້ວຂ້ານ້ອຍຈະຖ້າຊອມເບິ່ງດ້ວຍຄວາມລະມັດຣະວັງ
ເພື່ອຈະເບິ່ງເຫັນວ່າພຣະອົງຈະເວົ້າຫຍັງຕໍ່ຂ້ານ້ອຍ ແລະເຖິງວິທີທີ່ຂ້ານ້ອຍຄວນຫັນຈາກການຮ້ອງທຸກຂອງຂ້ານ້ອຍນັ້ນ.

[2]ພຣະຢາເວໄດ້ຕອບແລະເວົ້າແກ່ຂ້າພຣະເຈົ້າວ່າ, “ຈົ່ງບັນທຶກນິມິດນີ້ ແລະ ຂຽນໃສ່ແຜ່ນປ້າຍຢ່າງຊັດເຈນ
ເພື່ອໃຫ້ທຸກຄົນອ່ານນິມິດນີ້ຈະແລ່ນ.[3]ເພາະວ່າສິ່ງທີ່ເຮົາບອກມານັ້ນ ຍັງບໍ່ເຖິງເວລາທີ່ຈະເກີດຂຶ້ນເປັນຈິງເທື່ອ
ແລະໃນທີ່ສຸດກໍານົດນັ້ນກໍຈະມາເຖິງ ແລະບໍ່ຫລົ້ມເຫລວ. ເຖິງວ່າຈະມາຊ້າ, ຈົ່ງຄອຍເບິ່ງເທາະ. ເພາະມັນຈະມາຮອດຕາມເວລາຢ່າງແນ່ນອນ
ແລະ ຍັງບໍ່ເຫິງດອກ.
[4]ເບິ່ງແມ! ຄົນທີ່ມີຄວາມປາຖນາບໍ່ຖືກຕ້ອງຢູ່ພາຍໃນເຂົາ ກໍເປັນຄົນຍິ່ງຍະໂສ. ແຕ່ຄົນຊອບທັມຈະມີຊີວິດຢູ່ໂດຍຄວາມເຊື່ອຂອງເຂົາ.
[5]ເພາະເຫລົ້າແວັງຄືຜູ້ທໍຣະຍົດຂອງຄົນຫນຸ່ມ ທີ່ຈອງຫອງເພື່ອວ່າເຂົາຈະບໍ່ເຂົ້າສະຫນິດ,
ແຕ່ຂະຫຍາຍຄວາມຢາກຂອງເຂົາເຫມືອນກັບຂຸມຝັງສົບ, ແລະເຫມືອນກັບຄວາມຕາຍ, ທີ່ບໍ່ເຄີຍອີ່ມ.
ພວກເຂົາຄອບຄອງບັນດາຊົນຊາດທັງຫລາຍ ແລະ ຮວບຮວມປະຊາຊົນທຸກຄົນມາເພື່ອຕົນເອງ.
[6]ທັງຫມົດເຫລົ່ານີ້ຈະບໍ່ສ້າງຄຳກ່າວທີ່ເຍາະເຍີ້ຍເຂົາ ແລະ ບົດເພງຫມິ່ນປະຫມາດໃສ່ເຂົາ, ທີ່ເວົ້າວ່າ,
'ວິບັດແກ່ຄົນທີ່ກຳລັງເພີ່ມພູນສິ່ງຂອງທີ່ບໍ່ແມ່ນຂອງເຂົາ! ອີກດົນປານໃດທີ່ພວກເຈົ້າ
ຈະເພີ່ມນຳຫນັກວິບັດທີ່ພວກເຈົ້າໄດ້ຍຶດມານັ້ນ?'[7]ຄົນທີ່ກັດກິນພວກເຈົ້າຈະບໍ່ລຸກຂຶ້ນມາຢ່າງທັນທີ
ແລະຄົນທັງຫລາຍທີ່ພວກເຈົ້າຢ້ານກົວຈະບໍ່ຕື່ນຂຶ້ນມາບໍ? ພວກເຈົ້າຈະກາຍເປັນເຫຍື່ອຂອງພວກເຂົາ.
[8]ເພາະພວກເຈົ້າໄດ້ປຸ້ນປະຊາຊົນຫລວງຫລາຍ, ບັນດາຄົນທີ່ຍັງເຫລືອທັງຫມົດຈະປຸ້ນພວກເຈົ້າ. ເພາະພວກເຈົ້າໄດ້ເຮັດໃຫ້ເລືອດຂອງມະນຸດ
ແລະ ການກະທຳອັນໂຫດຮ້າຍຕໍ່ດິນແດນ, ເມືອງທັງຫລາຍ, ແລະ ທຸກຄົນທີ່ອາໄສຢູ່ໃນເມືອງເຫລົ່ານັ້ນ.
[9]'ວິບັດແກ່ຄົນທີ່ສ້າງຄວາມຊົ່ວຮ້າຍ ເພື່ອຜົນກຳໄຣຂອງຄົວເຮືອນຂອງພວກເຂົາ, ເພື່ອເຂົາຈະຕັ້ງບ່ອນຢູ່ຂອງເຂົາໄວ້ເຖິງບ່ອນທີ່ສູງ
ເພື່ອຮັກສາຕົວເອງໃຫ້ປອດພັຍຈາກມືຂອງຄົນຊົ່ວ.'[10]ພວກເຈົ້າໄດ້ນຳຄວາມອັບອາຍມາສູ່ຄອບຄົວຂອງພວກເຈົ້າ
ດ້ວຍການທຳລາຍບັນດາຊົນຊາດຕ່າງໆ, ແລະໄດ້ເຮັດບາບຕໍ່ສູ້ກັບຕົວຂອງພວກເຈົ້າເອງ.[11]ເພາະກ້ອນຫີນທັງຫລາຍຈະສົ່ງສຽງຮ້ອງຈາກກຳແພງ,
ແລະຄານໄມ້ຈະຕອບພວກເຂົາ,
[12]ວິບັດແກ່ຄົນທີ່ສ້າງນະຄອນຫນຶ່ງດ້ວຍເລືອດ, ແລະຄົນທີ່ສະຖາປານາເມືອງຫນຶ່ງຂຶ້ນດ້ວຍຄວາມອະຍຸຕິທັມ.[13]ນີ້ບໍ່ໄດ້ມາຈາກພຣະຢາເວ
ໄດ້ເຮັດໃຫ້ຄົນທີ່ເຮັດວຽກຫນັກເພື່ອໄດ້ໄຟ ແລະ ຊາດອື່ນໆທັງຫມົດໄດ້ເຮັດໃຫ້ຕົວເອງເມື່ອຍອ່ອນໄປ ເພື່ອໄດ້ຄວາມຫວ່າງເປົ່າຊັ້ນບໍ?
[14]ແຕ່ດິນແດນນັ້ນຈະເຕັມໄປດ້ວຍຄວາມຮູ້ເຖິງພຣະຣັດສະຫມີ ຂອງພຣະຢາເວເຫມືອນນ້ຳທີ່ປົກຄຸມທະເລ.
[15]'ວິບັດແກ່ຄົນທີ່ກຳລັງເຮັດໃຫ້ເພື່ອນບ້ານຂອງພວກເຂົາດື່ມ, ພວກເຈົ້າເພີ່ມຢາພິດຂອງພວກເຈົ້າ ຈົນວ່າພວກເຈົ້າເຮັດໃຫ້ພວກເຂົາເມົາ
ພວກເຈົ້າຈະສາມາດເບິ່ງພວກເຂົາເປືອຍກາຍ.'[16]ພວກເຈົ້າຈະກິນຢ່າງໂລພາ ພ້ອມກັບຄວາມອັບອາຍຂາຍຫນ້າ ແທນທີ່ຈະໄດ້ຮັບກຽດຕິຍົດ.
ໃຫ້ພວກເຈົ້າດື່ມ, ແລ້ວກຽດຕິຍົດຂອງພວກເຈົ້າກໍຈະເສື່ອມເສັຽໄປ. ຈອກແຫ່ງການລົງໂທດຂອງພຣະຢາເວຈະມອບໃຫ້ພວກເຈົ້າ,
ແລະຄວາມອັບອາຍຈະປົກຄຸມກຽດຕິຍົດຂອງພວກເຈົ້າ.
[17]ການກະທຳຮຸນແຮງຕໍ່ເລບານອນ ຈະຖ້ວມພວກເຈົ້າ ແລະ ການທຳລາຍສັດຕ່າງໆ ຈະເຮັດໃຫ້ພວກເຈົ້າຢ້ານກົວ.
ເພາະພວກເຈົ້າເຮັດໃຫ້ເລືອດມະນຸດຕົກ ແລະ ພວກເຈົ້າໄດ້ກະທຳຢ່າງໂຫດຮ້າຍຕໍ່ດິນແດນນັ້ນ, ຕໍ່ຫົວເມືອງຕ່າງໆ, ແລະ
ທຸກຄົນທີ່ອາໄສຢູ່ເມືອງເຫລົ່ານັ້ນ.
[18]ຮູບເຄົາຣົບໃຫ້ຜົນປະໂຫຍດອັນໃດແກ່ພວກເຈົ້າ? ເພາະຄົນທີ່ໄດ້ແກະສະຫລັກມັນ, ຫລືຄົນທີ່ຫລໍ່ຮູບປັ້ນນັ້ນຈາກໂລຫະຫລອມ
ກໍເປັນຄຣູຂອງຄົນຂີ້ຕົວະ; ເພາະເຂົາວາງໃຈໃນຜົນງານແຫ່ງນ້ຳມືຂອງເຂົາເອງ ເມື່ອເຂົາສ້າງພຣະຕ່າງໆ ທີ່ເວົ້າບໍ່ໄດ້ນີ້ຂຶ້ນມາ.
[19]'ວິບັດແກ່ຄົນທີ່ກຳລັງເວົ້າຕໍ່ຮູບໄມ້ນັ້ນວ່າ, ຈົ່ງຕື່ນຂຶ້ນ! ຫລືເວົ້າກັບກ້ອນຫີນທີ່ເປັນໄບ້ວ່າ, ຈົ່ງລຸກຂຶ້ນ! ແຕ່ຮູບເຄົາຣົບເຫລົ່ານີ້ສອນດ້ວຍບໍ?
ເບິ່ງແມ ມັນໂອບດ້ວຍທອງຄຳ ຫລືເງິນ, ແຕ່ບໍ່ມີລົມຫາຍໃຈຢູ່ພາຍໃນຕົວເລີຍ.[20]ແຕ່ພຣະຢາເວຊົງປຣະທັບຢູ່ໃນ
ພຣະວິຫານອັນບໍຣິສຸດຂອງພຣະອົງ! ດິນແດນທັງສິ້ນ ຈົ່ງມິດງຽບຕໍ່ພຣະພັກຂອງພຣະອົງເຖີ້ນ."

 generated on Tue Jun 17 19:01:42 2025

3 [1]ຄຳອ້ອນວອນຂອງຜູ້ປະກາດພຣະທັມ ຮາບາກຸກ:[2]ໂອ ພຣະຢາເວ, ຂ້ານ້ອຍໄດ້ຍິນກ່ຽວກັບການລາຍງານຂອງພຣະອົງ, ແລະ
ຂ້ານ້ອຍເຕັມໄປດ້ວຍຄວາມຢຳເກງ. ຂ້າແດ່ພຣະຢາເວ, ຂໍຊົງຮື້ຟື້ນພຣະຣາຊະກິດຂອງພຣະອົງໃນທ່າມກາງເວລາເຫລົ່ານີ້;
ຂໍຊົງເຮັດໃຫ້ເປັນທີ່ຮູ້ຈັກ; ຂໍຊົງຣະນຶກເຖິງພຣະເມດຕາເມື່ອພຣະອົງຊົງພຣະພິໂຣດດ້ວຍເຖີ້ນ.

[3]ພຣະເຈົ້າໄດ້ສະເດັດກັບມາຈາກເມືອງເຕມານ ແລະອົງບໍຣິສຸດ ຈາກພູເຂົາປາຣານ. ເຊລາ.
ພຣະສະຫງ່າຣາສີຂອງພຣະອົງປົກຄຸມທົ່ວຟ້າສະຫວັນ, ແລະ ແຜ່ນດິນໂລກກໍຖືກເຮັດໃຫ້ເຕັມໄປດ້ວຍການສັນຣະເສີນພຣະອົງ.
[4]ພຣະຫັດຂອງພຣະອົງມີແສງສະຫວ່າງເຫລື້ອມມາບ ຟ້າແມບເຫລື້ອມ, ບ່ອນທີ່ຊົງຣິດທານຸພາບຂອງພຣະອົງໄດ້ເຊື່ອງຢູ່.
[5]ໂຣກລະບາດຮ້າຍແຮງໄດ້ນຳຫນ້າພຣະອົງໄປ, ແລະພັຍພິບັດໄດ້ຕິດຕາມພຣະບາດຂອງພຣະອົງ.
[6]ພຣະອົງໄດ້ຊົງຢືນ ແລະ ຕັດສິນແຜ່ນດິນໂລກ; ພຣະອົງຊົງເບິ່ງ ແລະໄດ້ສັ່ນບັນດາຊົນຊາດທັງຫລາຍ.
ເຖິງພູເຂົາກໍຍັງຖືກເຮັດໃຫ້ແຕກສະຫລາຍ, ແລະເນີນພູທີ່ຍືນຍົງກໍຍັງໄດ້ກົ້ມກາບລົງ. ວິທີຂອງພຣະອົງນັ້ນຄົງຢູ່ເປັນນິດ.
[7]ຂ້ານ້ອຍໄດ້ເຫັນເຕັນຂອງພົນລະເມືອງກູຊານຢູ່ໃນຄວາມເຈັບປວດ, ແລະຜ້າເຕັນທັງຫລາຍໃນດິນແດນມີດີອານຕົວສັ່ນຂວັນເສັຽ.
[8]ພຣະຢາເວຊົງພຣະພິໂຣດຕໍ່ແມ່ນ້ຳທັງຫລາຍບໍ? ພຣະພິໂຣດຂອງພຣະອົງຊົງມີຕໍ່ແມ່ນ້ຳທັງຫລາຍ,
ຫລືຄວາມເດືອດດານຂອງພຣະອົງມີຕໍ່ທະເລ, ເມື່ອພຣະອົງຊົງຄວບຄຸມເຫນືອບັນດາມ້າຂອງພຣະອົງ ແລະ
ບັນດາລົດມ້າເສິກທີ່ມີໄຊຊະນະຂອງພຣະອົງບໍ?
[9]ພຣະອົງຊົງນຳຫນ້າທະນູຂອງພຣະອົງອອກມາ ໂດຍປາສະຈາກທີ່ກຳບັງ; ພຣະອົງໄດ້ຊົງແນບລູກສອນເຖິງຄັນທະນູຂອງພຣະອົງ! ເຊລາ.
ພຣະອົງໄດ້ຊົງແບ່ງແຜ່ນດິນໂລກເປັນສອງສ່ວນດ້ວຍແມ່ນ້ຳທັງຫລາຍ.[10]ບັນດາພູເຂົາໄດ້ເຫັນພຣະອົງ ແລະ ໄດ້ບິດບັ່ຽວດ້ວຍຄວາມເຈັບປວດ.
ນ້ຳຝົນຫ່າໃຫຍ່ໄດ້ຜ່ານພວກມັນໄປ; ທະເລເລິກໄດ້ຍົກສຽງໂຫ່ຮ້ອງ. ມັນຍົກຟອງທັງຫລາຍຂອງມັນຂຶ້ນມາ.
[11]ດວງຕາເວັນ ແລະ ດວງເດືອນໄດ້ຢຸດນິ້ງຢູ່ເຫນືອສະຖານະການທີ່ສູງສົ່ງທັງຫລາຍຂອງພວກມັນ,
ໃນທີ່ຊຶ່ງມີຄວາມແສງສະຫວ່າງແຫ່ງຂອງສາຍຟ້າແມບ ແຫ່ງຫອກຂອງພຣະອົງພຸ່ງຜ່ານໄປ.
[12]ພຣະອົງສະເດັດແຫ່ຂ້ວາມແຜ່ນດິນໂລກດ້ວຍຄວາມເດືອດດານ. ໃນພຣະພິໂຣດຂອງພຣະອົງໄດ້ຂ້ຽນຕີບັນດາປະຊົນຊາດທັງຫລາຍ.
[13]ພຣະອົງສະເດັດອອກໄປ ເພື່ອຄວາມລອດພົ້ນຂອງໄພ່ພົນຂອງພຣະອົງ. ເພື່ອຄວາມລອດພົ້ນຂອງຜູ້ທີ່ພຣະອົງເລືອກໄວ້
ພຣະອົງຊົງທຳລາຍຜູ້ນຳຂອງຄົວເຮືອນຂອງຄົນຊົ່ວຮ້າຍ ເພື່ອເປີດໂປງຖານຂອງລຳຄໍ. ເຊລາ.
[14]ພຣະອົງແທງຫົວຫນ້ານັກຮົບຂອງເຂົາດ້ວຍລູກສອນຂອງເຂົາເອງ ຕັ້ງແຕ່ເມື່ອພວກເຂົາໄດ້ເຂົ້າມາເຫມືອນກັບລົມພະຍຸພັດ
ເພື່ອເຮັດໃຫ້ພວກເຮົາແຕກແຍກກະຈັດກະຈາຍໄປ, ການເພ່ງເລັງເບິ່ງຂອງພວກເຂົາ ກໍເປັນເຫມືອນຄົນທີ່ກັດກິນຄົນຍາກຈົນໃນສະຖານທີ່ລີ້ພັຍ.
[15]ພຣະອົງໄດ້ຊົງເດີນທາງຂ້ວາມທະເລພ້ອມກັບບັນດາລົດມ້າຂອງພຣະອົງ, ແລະຊົງເຮັດໃຫ້ນ້ຳຫລວງຫລາຍພູນສູງຂຶ້ນ.
[16]ເມື່ອຂ້ານ້ອຍໄດ້ຍິນແລະສ່ວນພາຍໃນຂອງພຣະອົງໄດ້ສັ່ນໄຫວ. ຣິມສົບຂອງຂ້ານ້ອຍກໍສັ່ນດ້ວຍຄວາມຢ້ານຕໍ່ສຽງນັ້ນ
ຄວາມພຸພັງກໍເຂົ້າມາໃນກະດູກຂອງຂ້ານ້ອຍ, ແລະພາຍໃນຂ້ານ້ອຍກໍສັ່ນໄຫວ ໃນຂະນະທີ່ຂ້ານ້ອຍຄອຍຖ້າຢ່າງມິດງຽບ
ສຳລັບວັນແຫ່ງຄວາມເຈັບປວດນັ້ນ ທີ່ມາເຫນືອປະຊາຊົນຊຶ່ງບຸກລຸກພວກເຮົາ.
[17]ເຖິງແມ່ນວ່າຕົ້ນຫມາກເດືອບໍ່ມີຫນໍ່ ແລະບໍ່ມີຜົນຈາກເຄືອອະງຸ່ນ; ແລະເຖິງແມ່ນວ່າຜົນຂອງຕົ້ນຫມາກກອກເຮັດໃຫ້ສິ້ນຫວັງ ແລະ
ທົ່ງນາບໍ່ມີອາຫານ; ແລະເຖິງແມ່ນວ່າຝູງແກະຖືກຄັດອອກແລະບໍ່ມີຝູງງົວໃນຄອກ, ນີ້ຄືສິ່ງທີ່ຂ້ານ້ອຍຈະເຮັດ.
[18]ຂ້ານ້ອຍ, ຈະຍັງຄົງຊົມຊື່ນປິຕິຍິນດີໃນພຣະຢາເວ. ຂ້ານ້ອຍຈະປິຕິຍິນດີ ເພາະພຣະເຈົ້າແຫ່ງຄວາມລອດພົ້ນຂອງຂ້ານ້ອຍ.
[19]ພຣະຢາເວຊົງເປັນເຫື່ອແຮງຂອງຂ້ານ້ອຍ ແລະພຣະອົງຊົງເຮັດໃຫ້ຕີນຂອງຂ້ານ້ອຍເຫມືອນກວາງໂຕແມ່.
ພຣະອົງຊົງເຮັດໃຫ້ຂ້ານ້ອຍກ້າວໄປຂ້າງຫນ້າເຖິງທີ່ສູງຂອງຂ້ານ້ອຍ. —ເຖິງຜູ້ກຳກັບດົນຕຣີ, ດ້ວຍເຄື່ອງດົນຕຣີທີ່ມີສາຍຂອງຂ້ານ້ອຍ.

# ເຊຟານີຢາ

## 1

[1]ນີ້ຄືພຣະທຳຂອງພຣະເຈົ້າຢາເວທີ່ມາຮອດເຊຟານີຢາລູກຊາຍຂອງຄູຊີ ຜູ້ເປັນລູກຊາຍຂອງເກດາລີຢາ, ຜູ້ເປັນລູກຊາຍຂອງອາມາຣີຢາ
ຜູ້ເປັນລູກຊາຍຂອງເຮເຊກີຢາ, ໃນສະໄຫມຂອງໂຢຊີຢາ ລູກຂອງອາໂມນ, ກະສັດແຫ່ງຢູດາ.[2]"ເຮົາຈະກວາດລ້າງທຸກຢ່າງໄປຈາກພື້ນແຜ່ນດິນ
- ນີ້ເປັນພຣະດຳຣັດຂອງພຣະເຈົ້າຢາເວ.[3]ເຮົາຈະທຳລາຍທັງຄົນ ແລະ ສັດ; ເຮົາຈະທຳລາຍນົກໃນອາກາດ ແລະ ທັງປາໃນນໍ້າດ້ວຍ,
ເຮົາຈະໂຄນລົ້ມຄົນອະທຳ. ເພາະເຮົາຈະກຳຈັດມະນຸດໄປຈາກພື້ນແຜ່ນດິນ - ນີ້ເປັນພຣະດຳຣັດຂອງພຣະເຈົ້າຢາເວ.

[4]ເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ຢູດາ ແລະຕໍ່ສູ້ຜູ້ຢູ່ອາໄສຂອງນະຄອນເຢຣູຊາເລັມທັງຫມົດ.
ເຮົາຈະກຳຈັດສ່ວນທີ່ເຫລືອຂອງພະບາອານອອກຈາກສະຖານທີ່ນີ້ທັງຫມົດ ແລະ
ລວມທັງຊື່ຂອງຄົນໂງ່ທີ່ຫລົງໄຫລຂາບໄຫວ້ຮູບເຄົາຣົບທ່າມກາງພວກປະໂຣຫິດ,[5]ພວກຄົນທີ່ຂາບໄຫວ້ບໍລິວານແຫ່ງທ້ອງຟ້າ, ແລະ
ພວກປະຊາຊົນທີ່ນະມັດສະການ ແລະສາບານຕໍ່ພຣະເຈົ້າຢາເວແລ້ວ ແຕ່ຍັງສາບານໂດຍກະສັດຂອງພວກເຂົາ.
[6]ເຮົາຈະກຳຈັດຜູ້ທີ່ຫັນຫນີໄປຈາກການຕິດຕາມຂອງພຣະເຈົ້າຢາເວ, ຄືພວກທີ່ບໍ່ໄດ້ສະແຫວງຫາພຣະເຈົ້າຢາເວຫລື
ຂໍການຊົງນຳຂອງພຣະອົງ."
[7]ຈົ່ງມິດງຽບຕໍ່ຫນ້າພຣະເຈົ້າຢາເວອົງພຣະຜູ້ເປັນເຈົ້າ! ເພາະວ່າວັນແຫ່ງພຣະເຈົ້າຢາເວກໍມາໃກ້ແລ້ວ;
ພຣະເຈົ້າຢາເວຊົງຕຽມການຖວາຍບູຊາແລ້ວ ແລະຊົງແຍກຜູ້ໄດ້ຮັບເຊີນຂອງພຣະອົງໄວ້.[8]" ສິ່ງນີ້ຈະເກີດຂຶ້ນ
ໃນວັນແຫ່ງການບູຊາຂອງພຣະຢາເວ, ເຮົາຈະລົງໂທດພວກເຈົ້າຊາຍ ແລະ ບັນດາພະໂອຣົດຂອງກະສັດທັງຫລາຍ, ແລະ

 generated on Tue Jun 17 19:01:42 2025

ຄົນທັງປວງທີ່ໃສ່ເສື້ອຜ້າຂອງຄົນຕ່າງຊາດ.[9]ໃນວັນນັ້ນເຮົາຈະລົງໂທດທຸກຄົນທີ່ໂດດຂ້າມປະຕູ, ແລະ
ພວກທີ່ເຮັດໃຫ້ບ້ານເຈົ້ານາຍຂອງພວກເຂົາ ເຕັມໄປດ້ວຍຄວາມທາລຸນ ແລະການຫລອກຫລວງ.
[10]ດັ່ງນັ້ນໃນວັນນັ້ນມັນເປັນພຣະດຳລັດຂອງພຣະເຈົ້າຢາເວ - ໃນວັນນັ້ນຈະມີສຽງຮ້ອງຈາກປະຕູປາ, ແລະ
ສຽງຮ້ອງໄຫ້ຈາກເຂດສ້າງໃຫມ່ທີ່ສອງ, ແລະ ສຽງແຕກມາຈາກເນີນເຂົາ.[11]ຈົ່ງຮ້ອງໄຫ້ຮ່ຳໄຮ, ເຈົ້າຜູ້ອາໄສໃນຍ່ານຕະຫລາດເມືອງ,
ເພາະພໍ່ຄ້າທັງຫລາຍຈະຖືກທຳລາຍໃຫ້ຫມົດໄປ; ທຸກຄົນທີ່ເຫັນແກ່ເງິນຈະຖືກຕັດອອກໄປທັງຫມົດ.
[12]ໃນເວລານັ້ນເຮົາເອົາຕະກຽງຊ່ອງເບິ່ງນະຄອນເຢຣູຊາເລັມ ແລະ ເຮົາຈະລົງໂທດພວກບໍ່ຮູ້ຮ້ອນຮູ້ຫນາວມາດົນ, ຄືຕະກອນເຫລົ້າອະງຸ່ນ ແລະ
ເວົ້າໃນໃຈຂອງພວກເຂົາວ່າ, "ພຣະເຈົ້າຢາເວຈະບໍ່ຊົງເຮັດຫຍັງເຮົາ, ບໍ່ວ່າດີຫລືຮ້າຍ."[13]ແຕ່ຊັບສົມບັດຂອງພວກເຂົາຈະຖືກປຸ້ນ, ແລະ
ບ້ານຂອງພວກເຂົາຈະຖືກປະໃຫ້ຮ້າງເປົ່າ! ເຖິງວ່າພວກເຂົາຈະສ້າງບ້ານເຮືອນ ແຕ່ເຂົາທັງຫລາຍກໍຈະບໍ່ໄດ້ຢູ່, ແລະ
ເຖິງວ່າຈະເຮັດສວນອະງຸ່ນ ແຕ່ເຂົາທັງຫລາຍກໍຈະບໍ່ໄດ້ດື່ມເຫລົ້າອະງຸ່ນຂອງພວກເຂົາ.
[14]ວັນອັນຍິ່ງໃຫຍ່ແຫ່ງພຣະເຈົ້າຢາເວກໍໃກ້ເຂົ້າມາແລ້ວ, ໃກ້ເຂົ້າມາ ແລະ ມາໄວຫລາຍ! ສຽງຮ້ອງໃນວັນພຣະເຈົ້າຢາເວ
ຄືນັກຮົບຈະຮ້ອງສຽງດັງຂົມຂື່ນທີ່ນັ້ນ![15]ວັນນັ້ນຈະເປັນວັນແຫ່ງພຣະພິໂລດ, ເປັນວັນທີ່ທຸກໃຈ ແລະ ລະທົມໃຈ, ເປັນວັນແຫ່ງພາຍຸ
ແລະການທຳລາຍລ້າງ, ເປັນວັນທີ່ມືດ ແລະ ມົນຫມອງ, ເປັນວັນທີ່ເມກຄຸມແລະມືດທຶບ.[16]ວັນທີ່ມີສຽງແກ ແລະສຽງໂຫ່ຮ້ອງຂອງສົງຄາມ
ຕໍ່ສູ້ບັນດາເມືອງທີ່ມີປ້ອມປ້ອງກັນ ແລະ ມີຫໍຄອຍສູງ
[17]ເພາະເຮົາຈະນຳຄວາມທຸກມາສູ່ມະນຸດ, ພວກເຂົາຈະຍ່າງແບບຄົນຕາບອດ ເພາະເຂົາໄດ້ເຮັດບາບຕໍ່ພຣະເຈົ້າຢາເວ.
ໂລຫິດຂອງເຂົາຈະຖືກເທອອກຄືຝຸ່ນລະອອງ, ແລະ ອະໄວຍະວະພາຍໃນຂອງເຂົາຈະຖືກເທອອກຄືມູນສັດ.[18]ເງິນຫລືທອງຄຳຂອງເຂົາ
ຈະບໍ່ສາມາດຊ່ວຍກູ້ເຂົາໄດ້ ໃນວັນແຫ່ງພຣະພິໂລດຂອງພຣະເຈົ້າຢາເວ. ດ້ວຍໄຟແຫ່ງຄວາມຫວງແຫນຂອງພຣະອົງ
ໂລກພິພົບທັງຫມົດຈະຖືກເຜົາຜານ, ເພາະພຣະອົງຈະເຮັດໃຫ້ຜູ້ຢູ່ອາໄສເທິງໂລກພິພົບທັງຫມົດ ເຖິງຈຸດຈົບແບບສິ້ນເຊີງ ແລະ
ດ້ວຍຄວາມສະທ້ານຢ້ານກົວ."

 generated on Tue Jun 17 19:01:42 2025

2 [1]ລວມໂຕກັນເຖາະ ຊົນຊາດທີ່ບໍ່ມີຄວາມອັບອາຍເອີຍ -[2]ກ່ອນທີ່ຄຳບັນຊາຈະມາຮອດ ແລະ ວັນເວລາຜ່ານໄປຄືແກບທີ່ປິວ,
ກ່ອນທີ່ຄວາມໂກດຮ້າຍໂມໂຫຂອງພຣະເຈົ້າຢາເວຈະມາຮອດເຈົ້າ, ກ່ອນວັນທີ່ພຣະພິໂລດຂອງພຣະເຈົ້າຢາເວຈະລົງມາເຫນືອເຈົ້າ.
[3]ຈົ່ງສະແຫວງຫາພຣະເຈົ້າຢາເວເທີ້ນ, ບັນດາຜູ້ຖ່ອມໃຈໃນແຜ່ນດິນໂລກ ຜູ້ທີ່ເຮັດຕາມພຣະບັນຊາຂອງພຣະອົງ! ຈົ່ງຊອກຫາຄວາມຊອບທຳ.
ສະແຫວງຫາຄວາມຖ່ອມໃຈ, ແລະ ບາງທີເຈົ້າຈະໄດ້ຮັບການປົກປ້ອງ ໃນວັນແຫ່ງພຣະພິໂລດຂອງພຣະເຈົ້າຢາເວ.

[4]ເພາະກາຊາຈະຖືກປ່ອຍຮ້າງ, ແລະ ອາຊະເກໂລນຈະຖືກປ່ອຍໃຫ້ຮົກຮ້າງ. ພວກເຂົາຈະຂັບໄລ່ອາຊະໂດດໃນຍາມທ່ຽງວັນ, ແລະ
ພວກເຂົາຈະຖອນຮາກເອັກໂຣນ![5]ວິບັດຈົ່ງມີແກ່ເຈົ້າຜູ້ອາໄສຢູ່ແຄມທະເລ, ຊາວເກເຣັດເອີຍ!
ພຣະຄຳຮັດຂອງພຣະເຈົ້າຢາເວໄດ້ກ່າວໂທດເຈົ້າວ່າ, ການາອານ, ດິນແດນແຫ່ງຊາວຟີລິດສະຕິນ. ເຮົາຈະທຳລາຍເຈົ້າ
ບໍ່ໃຫ້ເຫລືອແມ່ນແຕ່ຄົນດຽວ.
[6]ດັ່ງນັ້ນດິນແດນແຄມທະເລ ຈະກາຍເປັນທົ່ງຫຍ້າສຳລັບບັນດາຜູ້ລ້ຽງແກະ ແລະ ສຳລັບຄອກແກະ.
[7]ດິນແດນຝັ່ງທະເລນັ້ນຈະຕົກເປັນຂອງຄົນທີ່ເຫລືອຂອງຢູດາ, ທີ່ນັ້ນພວກເຂົາຈະລ້ຽງຝູງແກະ.
ປະຊາຊົນຂອງພວກເຂົາຈະນອນລົງໃນບ້ານເຮືອນຂອງອາຊະເກໂລນ ໃນຍາມແລງ, ເພາະພຣະເຈົ້າຢາເວ ພຣະເຈົ້າຂອງພວກເຂົາ
ຈະຊົງດູແລພວກເຂົາ ແລະ ຊົງໃຫ້ເຂົາຄືນສູ່ສະພາບດີອີກເທື່ອຫນຶ່ງ ແລະ ຈະນຳຊະເລີຍຂອງພວກເຂົາກັບມາ.
[8]"ເຮົາໄດ້ຍິນຄຳຫມິ່ນປະຫມາດຂອງໂມອາບ ແລະ ຄຳສຽດສີຂອງປະຊາຊົນຊາວອຳໂມນ ເມື່ອພວກເຂົາຫມິ່ນປະຫມາດປະຊາຊົນຂອງເຮົາ
ແລະ ຂົ່ມຂູ່ເອົາດິນແດນຂອງພວກເຂົາ.[9]ສະນັ້ນ, ດັ່ງເຮົາມີຊີວິດຢູ່ - ນີ້ແມ່ນຄຳປະກາດຂອງພຣະເຈົ້າຢາເວຈອມໂຢທາ,
ພຣະເຈົ້າແຫ່ງອິດສະຣາເອນ, - ໂມອາບຈະເປັນເຫມືອນໂຊໂດມ, ແລະ ຊາວອຳໂມນຈະເປັນເຫມືອນໂກໂມຣາ;
ຢ່າງແຫ້ງສັນນັ້ນເປັນແຫລ່ງບໍ່ເກືອ, ເປັນແດນທີ່ຮົກຮ້າງຕະຫລອດໄປ. ແຕ່ປະຊາຊົນຂອງພວກເຮົາທີ່ເຫລືອຢູ່ ຈະປຸ້ນພວກເຂົາ
ແລະຊົນຊາດຂອງເຮົາທີ່ລອດຊີວິດມາ ຈະຄອບຄອງດິນແດນຂອງພວກເຂົາ."
[10]ສິ່ງນີ້ໄດ້ເກີດຂຶ້ນຕໍ່ຊາວໂມອາບ ແລະຊາວອຳໂມນເພາະຄວາມຍິ່ງຈອງຫອງຂອງພວກເຂົາ, ເມື່ອພວກເຂົາໄດ້ຫມິ່ນປະຫມາດ ແລະ
ເຢາະເຍີ້ຍປະຊາຊົນຂອງພຣະເຈົ້າຢາເວຈອມໂຢທາ.[11]ແລ້ວພວກເຂົາຈະຢຳເກງພຣະເຈົ້າຢາເວ,
ເມື່ອພຣະອົງຈະຊົງທຳລາຍພະເຈົ້າທັງປວງຂອງທາງໂລກນັ້ນ. ທຸກຄົນຈະນະມັດສະການພຣະອົງ, ໃນດິນແດນຂອງຕົນ,
ຈາກຊາຍຝັ່ງທະເລທຸກແຫ່ງ.
[12]ພວກເຈົ້າຊາວເອທິໂອເປຍທັງຫລາຍເອີຍຈະຖືກປະຫານດ້ວຍດາບຂອງເຮົາເຊັ່ນກັນ,[13]ແລະ
ພຣະຫັດຂອງພຣະເຈົ້າຈະຕໍ່ສູ້ກັບດິນແດນພາກເຫນືອ ແລ ະຊົງທຳລາຍອັດຊີເຣຍ, ດັ່ງນັ້ນນະຄອນນີເນເວຈະເປັນທີ່ຮ້າງເປົ່າ, ແລະ
ແຫ້ງແລ້ງເຫມືອນດັ່ງທະເລຊາຍ.[14]ແລ້ວຝູງສັດທັງຫລາຍຈະນອນທີ່ນັ້ນ, ລວມທັງສິ່ງສາລາສັດທຸກຊະນິດຂອງບັນດາປະຊາຊາດ, ທັງນົກເຄົ້າ
ແລະ ກາດຳຈະຢູ່ບ່ອນເທິງສຸດຂອງເສົາ. ສຽງຮ້ອງຂອງມັນດັ່ງກ້ອງຜ່ານປະຕູປ່ອງຢ້ຽມ; ຕາມທາງຈະມີກອງເສດຫີນເສດປູນ;
ຄານໄມ້ສົນແກະສະລັກຂອງເມືອງຈະລອກອອກ.
[15]ນີ້ແຫລະນະຄອນເຈົ້າສຳລານ ເຊິ່ງຢູ່ມາແບບບໍ່ມີຄວາມຢ້ານກົວ, ແລະໄດ້ເວົ້າໃນໃຈຂອງນາງວ່າ, "ນີ້ແຫລະເຮົາ, ແລະ
ບໍ່ມີໃຜສະເຫມີເຫມືອນເຮົາ." ແລ້ວນາງກໍຈະພົບກັບຄວາມພິນາດຂະຫນາດໃດ, ສະຖານທີ່ເປັນທີ່ອາໄສຂອງສັດປ່າ. ຄົນທັງປວງທີ່ຜ່ານນາງໄປ
ມາກໍເຢາະເຍີ້ຍ ແລະ ສັ່ນກຳປັ້ນໃສ່ນາງ.


generated on Tue Jun 17 19:01:42 2025

3 [1]ວິບັດຈົ່ງມີແກ່ເມືອງທີ່ທໍລະຍົດ! ເມືອງທີ່ມີຄວາມຮຸນແຮງເປັນມົນທິນ.[2]ນາງບໍ່ຍອມຟັງສຽງຂອງພຣະເຈົ້າ, ຫລື
ຍອມຮັບການແກ້ໄຂຈາກພຣະເຈົ້າຢາເວ. ນາງບໍ່ໄດ້ໄວ້ວາງໃຈໃນພຣະເຈົ້າຢາເວ ແລະ ບໍ່ຍອມເຂົ້າມາໃກ້ພະເຈົ້າຂອງນາງ.

[3]ເຈົ້ານາຍຂອງເມືອງນີ້ເປັນຄືສິງໂຕທີ່ຮ້ອງຄາມຣາມໃນທ່າມກາງພວກນາງ. ຜູ້ຕັດສິນຂອງນາງເປັນຄືຫມາປ່າໃນຍາມກາງຄືນ
ຜູ້ຊຶ່ງບໍ່ເຫລືອອີຫຍັງໄວ້ເຖິງຕອນເຊົ້າ.[4]ພວກຜູ້ເຜີຍພະວັດຈະນະຂອງນາງເປັນຄົນອວດອ້າງ ແລະ ເປັນຄົນທໍລະຍົດ.
ບັນດາປະໂຣຫິດຂອງນາງກໍດູຫມິ່ນປະຫມາດສິ່ງສັກສິດ ແລະ ຝ່າຝືນກົດບັນຍັດ.
[5]ພຣະເຈົ້າຢາເວຜູ້ຊຶ່ງຊອບທຳ ໃນທ່າມກາງນາງ. ພຣະອົງບໍ່ຊົງເຮັດຜິດເລີຍ. ທຸກເຊົ້າພຣະອົງຈະຊົງເຮັດຄວາມຍຸດຕິທຳຂອງພຣະອົງໃຫ້ປະຈັກ!
ບໍ່ເກັບໄວ້ໃນຄວາມສະຫວ່າງເລີຍ, ແຕ່ຄົນອະທຳນັ້ນບໍ່ຮູ້ຈັກອາຍ.
[6]"ເຮົາໄດ້ທຳລາຍປະຊາຊາດທັງຫລາຍ; ປ້ອມປາການຂອງພວກເຂົາໄດ້ຖືກທຳລາຍລ້າງ.
ເຮົາເຮັດໃຫ້ຖະຫນົນຫົນທາງຂອງພວກເຂົາຮ້າງເປົ່າປ່ຽວ, ເພື່ອວ່າບໍ່ມີໃຜຜ່ານໄປມາ. ເມືອງຕ່າງໆ ຂອງເຂົາຖືກທຳລາຍ
ເພື່ອບໍ່ມີໃຜອາໄສຢູ່ໃນນັ້ນເລີຍຈັກຄົນ.[7]ເຮົາໄດ້ກ່າວວ່າ, "ແນ່ນອນພວກເຈົ້າຈະຢຳເກງເຮົາ. ຈົ່ງຍອມຮັບການຕີສອນ ແລະ
ບໍ່ຕ້ອງຖືກຕັດອອກຈາກຄອບຄົວຂອງເຈົ້າໂດຍທຸກສິ່ງທີ່ເຮົາວາງແຜນທີ່ຈະເຮັດຕໍ່ເຈົ້າ."
ແຕ່ເຂົາທັງຫລາຍໄດ້ກະຕືລືລົ້ນຂຶ້ນທຸກເຊົ້າໂດຍການກະທຳສິ່ງທີ່ຊົ່ວຮ້າຍທຸກຢ່າງຂອງພວກເຂົາ.
[8]ພຣະເຈົ້າຢາເວໄດ້ຊົງປະກາດດັ່ງນີ້ວ່າ - “ເພາະສະນັ້ນຈົ່ງຄອຍເຮົາ - ຈົນເຖິງວັນທີ່ເຮົາລຸກຂຶ້ນເພື່ອຜູ້ຕົກເປັນເຫຍື່ອ.
ເພາະເຮົາຕັດສິນໃຈທີ່ຈະລວບລວມປະຊາຊາດ, ແລະ ໃຫ້ອານາຈັກມາຊຸມນຸມກັນ, ເພື່ອເທຄວາມໂກດຮ້າຍ,
ພຣະພິໂຣດອັນຮ້າຍແຮງທັງຫມົດຂອງເຮົາ, ເພື່ອວ່າໂລກພິພົບທັງຫມົດຈະຖືກເຜົາຜານດ້ວຍໄຟແຫ່ງຄວາມໂມໂຫຂອງເຮົາ.
[9]ແຕ່ແລ້ວເຮົາຈະໃຫ້ສົບປາກທີ່ບໍຣິສຸດແກ່ປະຊາຊົນທັງຫລາຍ, ເພື່ອວ່າທຸກຄົນຈະຮ້ອງທູນອອກພຣະນາມພຣະເຈົ້າຢາເວ
ເພື່ອບົວລະບັດຮັບໃຊ້ພຣະອົງດ້ວຍໃຈອັນດຽວກັນ.[10]ຜູ້ທີ່ນະມັດສະການເຮົາ ຈາກຟາກຂ້າງຂອງແມ່ນໍ້າເອທີໂອເປຍ - ປະຊາຊົນຂອງເຮົາ
ທີ່ກະຈັດກະຈາຍໄປ - ຈະນຳເຄື່ອງບູຊາມາຍັງເຮົາ.[11]ໃນມື້ນັ້ນເຈົ້າຈະບໍ່ຖືກເຮັດໃຫ້ອັບອາຍ ຈາກການກະທຳທັງຫມົດທີ່ເຈົ້າໄດ້ຕໍ່ຕ້ານເຮົາ,
ຕັ້ງແຕ່ເວລານັ້ນເຮົາຈະເອົາຄົນທີ່ຊື່ນຊົມຄວາມຈອງຫອງຂອງຕົນໃຫ້ອອກໄປຈາກທ່າມກາງພວກເຈົ້າ, ແລະ ເພາະເຈົ້າກໍຈະບໍ່ຍົ່ງຈອງຫອງ
ທີ່ພູເຂົາອັນບໍຣິສຸດຂອງເຮົາອີກຕໍ່ໄປ.
[12]ແຕ່ເຮົາຈະປະເຈົ້າໃຫ້ເຫມືອນຢ່າງຄົນທີ່ຕໍ່າຕ້ອຍ ແລະ ທຸກຈົນ, ແລະ ເຈົ້າຈະສະແຫວງຫາທີ່ລີ້ໄພໃນພຣະນາມຂອງພຣະເຈົ້າຢາເວ.
[13]ບັນດາຄົນທີ່ເຫລືອຢູ່ໃນອິດສະຣາເອນ ຈະບໍ່ເຮັດຄວາມບໍ່ຍຸດຕິທຳອີກຕໍ່ໄປ ຫລື ເວົ້າຂີ້ຕົວະ,
ແລະໃນປາກຂອງພວກເຂົານັ້ນຈະບໍ່ພົບຄວາມຫລອກຫລວງ; ເພາະພວກເຂົາທັງຫລາຍຈະຫາກິນ ແລະນອນລົງ, ແລະ
ບໍ່ມີໃຜເຮັດໃຫ້ເຂົາຢ້ານກົວ."
[14]ທິດາແຫ່ງຊີໂອນເອີຍ ຈົ່ງຮ້ອງເພງເຖາະ ອິດສະຣາເອນເອີຍ ຈົ່ງໂຮ່ຮ້ອງໃຫ້ກຶກກ້ອງ ຈົ່ງເປມປີແລະຊື່ນຊົມຍິນດີດ້ວຍສຸດໃຈຂອງເຈົ້າເຖາະ
ທິດາແຫ່ງເຢຣູຊາເລັມເອີຍ,[15]ພຣະເຈົ້າຢາເວຊົງຍົກເລີກການລົງໂທດເຈົ້າແລ້ວ; ພຣະອົງຊົງຂັບໄລ່ສັດຕູຂອງເຈົ້າໄປແລ້ວ!
ພຣະເຈົ້າຢາເວຊົງເປັນກະສັດແຫ່ງຊົນຊາດອິດສະຣາເອນຢູ່ທ່າມກາງພວກເຈົ້າ. ເຈົ້າຈະບໍ່ຢ້ານຄວາມຊົ່ວຮ້າຍອີກຕໍ່ໄປ!
[16]ໃນມື້ນັ້ນພວກເຂົາຈະເວົ້າກັບເຢຣູຊາເລັມວ່າ, "ໂອຊີໂອນເອີຍ, ຢ່າຢ້ານເລີຍ. ຢ່າໃຫ້ມືຂອງເຈົ້າອ່ອນເພຍໄປ.
[17]ພຣະຢາເວພຣະເຈົ້າຂອງເຈົ້າຊົງຢູ່ທ່າມກາງເຈົ້າ, ພຣະອົງຊົງຣິດອຳນາດທີ່ຈະຊ່ວຍກູ້ພວກເຈົ້າ.
ພຣະອົງຈະຊົງໃຫ້ຄວາມເບີກບານມ່ວນຊື່ນແກ່ເຈົ້າ ແລະ ເພາະເຈົ້າດ້ວຍຄວາມຍິນດີ ແລະ ຊົງສະຫງົບໃນຄວາມຮັກຂອງພຣະອົງ.
ພຣະອົງຈະຊົງເບີກບານເພາະເຈົ້າດ້ວຍການຮ້ອງເພງສຽງດັງ ດ້ວຍຄວາມຊື່ນຊົມຍິນດີ.[18]ເມື່ອໃນມື້ແຫ່ງເທດສະການຕາມກຳນົດ.
ເຮົາຈະກຳຈັດຄວາມໄພພິບັດອອກຈາກເຈົ້າ. ເພື່ອເຈົ້າຈະບໍ່ຕ້ອງທົນຮັບການອັບອາຍເພາະເລື່ອງນີ້ອີກ.
[19]ເບິ່ງແມ, ເຮົາຈະຈັດການກັບທຸກຄົນທີ່ກົດຂີ່ເຈົ້າ. ໃນເວລານັ້ນ, ເຮົາຈະຊ່ວຍຄົນພິການ ແລະ ລວບລວມຜູ້ທີ່ຖືກຂັບໄລ່ໄປ.
ເຮົາຈະເຮັດໃຫ້ພວກເຂົາເປັນທີ່ສັນລະເສີນ, ແລະ ເຮົາຈະປ່ຽນຄວາມອັບອາຍຂອງພວກເຂົາໃຫ້ເປັນຊື່ສຽງໂດ່ງດັງໄປທົ່ວໂລກ.
[20]ໃນເວລານັ້ນເຮົາຈະນຳພວກເຈົ້າ; ຄືໃນເວລາທີ່ເຮົາລວບລວມເຈົ້າເຂົ້າດ້ວຍກັນ. ເຮົາຈະເຮັດໃຫ້ທຸກປະຊາຊາດຂອງແຜ່ນດິນໂລກເຄົາລົບນັບຖື
ແລະສັນລະເສີນເຈົ້າ, ເມື່ອເຈົ້າເຫັນວ່າເຮົາໄດ້ໃຫ້ເຈົ້າກັບສູ່ສະພາບເດີມ" ພຣະເຈົ້າຢາເວກ່າວດັ່ງນີ້ແຫລະ.

# ພຣະຄຳພີ ຮັກກາຍ

1 [1]ໃນປີທີສອງແຫ່ງຣາຊະການກະສັດ ດາຣິອຸດ, ໃນວັນທີຫນຶ່ງຂອງເດືອນທີຫົກ, ພຣະທຳຂອງພຣະຢາເວໄດ້ມາໂດຍທາງຮັກກາຍ ຜູ້ປະ-
ກາດພຣະທຳ ເຖິງເຊຣູບາເບນ ລູກຊາຍເຊອານຕີເອນ ຜູ້ປົກຄອງເມືອງຢູດາ ແລະ ເຖິງໂຢຊວຍ ລູກຊາຍເຢໂຮຊາດັກ ມະຫາປະໂລຫິດວ່າ,
[2]"ພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ວ່າ: ປະຊາຊົນເຫລົ່ານີ້ກ່າວວ່າ, 'ຍັງບໍ່ເຖິງເວລາຂອງເຮົາທີ່ຈະມາ ຫລືຈະສ້າງພຣະວິ-
ຫານຂອງພຣະຢາເວ.”

[3]ແລ້ວພຣະທຳຂອງພຣະຢາເວຈຶ່ງມາໂດຍທາງຮັກກາຍ ຜູ້ປະກາດພຣະທຳວ່າ,[4]“ເຖິງເວ-
ລາແລ້ວຫລືທີ່ຕົວທ່ານຈະອາໄສໃນເຮືອນທີ່ສ້າງແລ້ວສົມບູນ ໃນຂະນະທີ່ພຣະວິຫານນີ້ຍັງເພພັງຢູ່?[5]ບັດນີ້ ພຣະຢາເວຈອມໂຢທາ ຈຶ່ງຊົງກ່າວວ່າ
“ຈົ່ງພິຈາລະນາເບິ່ງຫົນທາງຂອງເຈົ້າ![6]ເຈົ້າໄດ້ຫວ່ານຫລາຍ ແຕ່ເກັບກ່ຽວພຽງເຫລັກໜ້ອຍ; ເຈົ້າກິນແຕ່ບໍ່ເຄີຍອີ່ມ;
ເຈົ້າດື່ມແຕ່ກໍບໍ່ເຄີຍເຊົາຢາກ. ເຈົ້ານຸ່ງຫົ່ມແຕ່ກໍບໍ່ອົບອຸ່ນ, ແລະ ຄົນທີ່ໄດ້ຮັບຄ່າຈ້າງ ກໍເອົາເງິນໃສ່ລົງໃນຖົງທີ່ມີແຕ່ຮູ.
[7]ພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ວ່າ: “ຈົ່ງພິຈາລະນາເບິ່ງທາງຂອງເຈົ້າ![8]ພຣະຢາເວ ຊົງກ່າວວ່າ, "ຈົ່ງຂຶ້ນໄປເທິງພູ,
ແລ້ວເອົາໄມ້ມາສ້າງພຣະວິຫານຂອງເຮົາ; ເພື່ອທີ່ເຮົາຈະມີຄວາມພໍໃຈ, ແລະ ໄດ້ຮັບກຽດເພາະພຣະວິຫານນັ້ນ!”[9]“ເຈົ້າຫວັງໄດ້ຫລາຍ,
ແຕ່ເບິ່ງແມ! ເມື່ອເຈົ້ານຳຜົນອັນໜ້ອຍດຽວກັບໄປເຮືອນຂອງເຈົ້າ, ເຮົາກໍເປົ່າມັນໄປ! ເພາະເຫດໃດ?” ພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ວ່າ.
"ເພາະເຈົ້າຕ່າງກໍວຸ້ນຢູ່ກັບເຮືອນຂອງຕົນ, ແຕ່ປ່ອຍໃຫ້ວິຫານຂອງເຮົາຍັງເພພັງຢູ່.


generated on Tue Jun 17 19:01:42 2025

[10]ເພາະເຫດນີ້ ທ້ອງຟ້າຈະປິດນ້ຳຫມອກໄວ້ຈາກເຈົ້າ, ແລະ ແຜ່ນດິນຈະຢຸດການໃຫ້ເກດຜົນແກ່ເຈົ້າ.[11]ເຮົາໄດ້ເອີ້ນຄວາມແຫ້ງແລ້ງມາສູ່ແຜ່ນ-
ດິນ ແລະ ໂນນພູ, ເມັດເຂົ້າ, ນ້ຳອະງຸ່ນໃຫມ່ ແລະ ນ້ຳມັນ, ການເກັບກ່ຽວຂອງແຜ່ນດິນ, ນຸດ, ແລະ ສັດ, ແລະຜົນ-
ຈາກນ້ຳມືແຫ່ງການງານທຸກຢ່າງຂອງເຈົ້າ!”
[12]ແລ້ວເຊຣູບາເບນ ລູກຊາຍເຊອານຕີເອນ, ແລະ ໂຢຊວຍ ລູກຊາຍເຢໂຮຊາດັກມະຫາປະໂລຫິດ, ລວມທັງປະຊາຊົນທັງປວງທີ່ເຫລືອ,
ກໍໄດ້ເຊື່ອຟັງພຣະສຸລະສຽງຂອງພຣະຢາເວ ພຣະເຈົ້າຂອງເຂົາທັງຫລາຍ ແລະ ຖ້ອຍຄຳຂອງຜູ້ປະກາດພຣະທຳ ຮັກກາຍ, ເພາະວ່າພຣະຢາເວ
ພຣະເຈົ້າຂອງພວກເຂົາທັງຫລາຍໄດ້ໃຊ້ເພິ່ນມາ ແລະ ປະຊາຊົນກໍຢຳເກງພຣະພັກພຣະຢາເວ.[13]ແລ້ວຮັກກາຍ, ຜູ້ສື່ງຂ່າວຂອງພຣະຢາເວ,
ກ່າວຖ້ອຍຄຳຂອງພຣະຢາເວແກ່ປະຊາຊົນວ່າ, “ພຣະຢາເວປະກາດວ່າ ເຮົາຢູ່ກັບເຈົ້າ!”
[14]ດັ່ງນັ້ນພຣະຢາເວໄດ້ຊຸ໊ງບັນດົນໃຈຂອງເຊຣູບາເບນ ລູກຊາຍເຊອານຕີເອນ ຜູ້ປົກຄອງເມືອງຢູດາໃຫ້ຕື່ນ, ແລະ ໂຢຊວຍ ລູກຊາຍເຢໂຮຊາດັກ
ມະຫາປະໂລຫິດ, ແລະ ປະຊາຊົນທັງປວງທີ່ເຫລືອຢູ່ ເພື່ອພວກເຂົາຈະໄດ້ໄປສ້າງພຣະວິຫານຂອງພຣະຢາເວຈອມໂຢທາ ພຣະ-
ເຈົ້າຂອງພວກເຂົາ,[15]ໃນວັນທີຊາວສີ່ຂອງເດືອນທີຫົກ, ປີທີສອງແຫ່ງຣາຊະການກະສັດດາຣິອຸດ.

 generated on Tue Jun 17 19:01:42 2025

2 [1]ໃນເດືອນທີເຈັດ ວັນທີຊາວເອັດ ພຣະທຳຂອງພຣະຢາເວມາໂດຍທາງຜູ້ປະກາດພຣະທຳ ຮັກກາຍ, ກ່າວວ່າ,[2]"ຈົ່ງກ່າວແກ່ຜູ້ປົກ-
ຄອງເມືອງຢູດາ, ເຊຣູບາເບນລູກຊາຍເຊອານຕິເອນ, ແລະ ແກ່ມະຫາປະໂລຫິດ ໂຢຊວຍ ລູກຊາຍເຢໂຮຊາດັກ, ແລະກ່າວແກ່ປະຊາ-
ຊົນທີ່ເຫລືອຢູ່. ວ່າ,

[3]'ໃຜແດ່ທີ່ເຫລືອຢູ່ໃນທ່າມກາງພວກທ່ານ ທີ່ເຄີຍໄດ້ເຫັນພຣະຣັດສະມີແຫ່ງພຣະວິຫານນີ້ໃນຄາວກ່ອນ? ຕອນນີ້ ທ່ານເຫັນຢ່າງໃດ?
ຕ່າງໄປຈາກເດີມໃນສາຍຕາຂອງທ່ານຫລືບໍ່?[4]"ບັດນີ້, ເຊຣູບາເບນເອີຍ — ຈົ່ງເຂັ້ມແຂງເທີ້ນ! ໂອມະຫາປະໂລຫິດເອີຍ ໂຢຊວຍລູກຊາຍເຢໂຮ-
ຊາດັກ; ຈົ່ງເຂັ້ມແຂງເທີ້ນ, ປະຊາຊົນທັງຫມົດແຫ່ງແຜ່ນດິນເອີຍ, ຈົ່ງເຂັ້ມແຂງເທີ້ນ!" — ນີ້ຄືຄຳປະກາດຂອງພຣະຢາເວວ່າ,
"ຈົ່ງເຮັດວຽກໃຫ້ເຮົາ — ເພາະເຮົາຢູ່ກັບພວກເຈົ້າ! — ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ[5]"ນີ້ຄືພັນທະສັນຍາທີ່ເຮົາໄດ້ໃຫ້ແກ່ເຈົ້າ
ໄວ້ກ່ອນພວກເຈົ້າຈະອອກຈາກເອຢິບ, ແລະ ວິນຍານຂອງເຮົາກໍຢູ່ທ່າມກາງພວກເຈົ້າ, ຢ່າຊູ່ຢ້ານເລີຍ!"
[6]ເພາະພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ວ່າ: "ອີກບໍ່ດົນ ເຮົາຈະສັ່ນຟ້າສະຫວັນ ແລະ ແຜ່ນດິນໂລກ, ທະເລ ແລະແຜ່ນດິນແຫ້ງອີກຄັ້ງຫນຶ່ງ!
[7]ເຮົາຈະສັ່ນບັນດາປະຊາຊາດ, ແລະ ບັນດາຊາດທັງຫລາຍ ຈະນຳສິ່ງຂອງທີ່ມີຄ່າຂອງພວກເຂົາມາຖວາຍແກ່ເຮົາ,
ແລະເຮົາຈະຕື່ມພຣະວິຫານແຫ່ງນີ້ດ້ວຍສະຫງ່າຣາສີ," ພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ແຫລະ.
[8]ເງິນແລະຄຳເປັນຂອງເຮົາ! — ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ.[9]ສະຫງ່າຣາສີຂອງພຣະວິຫານຫລັງນີ້ໃນອະນາຄົດ
ຈະຍິ່ງໃຫຍ່ກວ່າເມື່ອເລີ່ມຕົ້ນ, ພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ແຫລະ, ແລະເຮົາຈະປະທານສັນຕິສຸກແກ່ສະຖານທີ່ແຫ່ງນີ້! —
ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ.
[10]ໃນວັນທີຊາວສີ່ ເດືອນທີເກົ້າ, ໃນປີທີສອງຂອງຣາຊະການດາຣິອຸດ, ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຮັກກາຍຜູ້ປະກາດພຣະທຳວ່າ,
[11]"ພຣະຢາເວກ່າວດັ່ງນີ້ວ່າ: ຈົ່ງຖາມບັນດາປະໂລຫິດກ່ຽວກັບເລື່ອງຂອງພຣະບັນຍັດດັ່ງນີ້ວ່າ,[12]'ຖ້າຜູ້ໃດຖືຕ່ອນຊີ້ນບໍຣິສຸດສຳລັບພຣະຢາເວ
ຫໍ່ດ້ວຍເສື້ອຄຸມຂອງເຂົາ, ແລະໄປຖືກເຂົ້າຈີ່ຫລືແກງ, ເຫລົ້າແຫວງ ຫລືນ້ຳມັນ, ຫລືອາຫານໃດໆກໍຕາມ, ສິ່ງເຫລົ່ານັ້ນຈະບໍ-
ຣິສຸດໄປນຳຫລືບໍ່?'" ບັນດາພວກປະໂລຫິດຕອບວ່າ, "ບໍ່."
[13]ແລ້ວຮັກກາຍໄດ້ກ່າວອີກວ່າ, "ຖ້າຫາກມີຄົນຫນຶ່ງຄົນໃດທີ່ເປັນມົນທິນເພາະໄປຖືກສົບມາ ແລ້ວມາແຕະຕ້ອງສິ່ງເຫລົ່ານີ້,
ສິ່ງເຫລົ່ານີ້ຈະເປັນມົນທິນໄປນຳຫລືບໍ່?" ບັນດາປະໂລຫິດຕອບວ່າ, "ແມ່ນ, ສິ່ງເຫລົ່ານັ້ນຈະເປັນມົນທິນໄປນຳ"[14]ແລ້ວຮັກກາຍຈຶ່ງຕອບວ່າ,
"ເພາະປະຊາຊົນກໍເປັນແບບນີ້ ແລະ ຊົນຊາດນີ້ ທີ່ຢູ່ຕໍ່ຫນ້າຂ້ານ້ອຍກໍເປັນແບບນີ້!—ນີ້ຄືຄຳປະກາດຂອງພຣະຢາເວ—
ແລະດັ່ງນັ້ນທຸກສິ່ງທີ່ເຮັດດ້ວຍມືຂອງພວກເຂົາ: ທີ່ພວກເຂົາໄດ້ຖວາຍແກ່ເຮົາກໍເປັນມົນທິນ.
[15]ບັດນີ້, ຈົ່ງພິຈາລະນາເບິ່ງວ່າ ໃນອະດີດໄດ້ເຮັດໃຫ້ເກີດອັນໃດຂຶ້ນຈົນເຖິງປັດຈຸບັນນີ້.
ກ່ອນທີ່ຫີນກ້ອນຫນຶ່ງຈະວາງຊ້ອນເທິງຫີນອີກກ້ອນຫນຶ່ງໃນພຣະວິຫານຂອງພຣະຢາເວ,[16]ແລ້ວຈະເປັນຢ່າງໃດ?
ເມື່ອທ່ານມາຕວງເຂົ້າຈຳນວນຊາວຫມື່ນ, ແຕ່ມີພຽງສິບຫມື່ນ; ແລະ ເມື່ອທ່ານມາເຖິງບໍ່ເກັບນ້ຳອະງຸ່ນ ເພື່ອຕັກເອົາຫ້າສິບຖັງ,
ແຕ່ກໍມີແຕ່ຊາວຖັງ.[17]"ເຮົາໄດ້ໂຈມຕີເຈົ້າແລະ ຜົນລະປູກແຫ່ງການງານຂອງເຈົ້າ ດ້ວຍການເຮັດໃຫ້ເກີດໂລກເຜ້ຍ ແລະ ເຊື້ອຣາ,
ແຕ່ເຈົ້າກໍຍັງບໍ່ຫັນກັບມາຫາເຮົາ—ນີ້ຄືຄຳປະກາດຂອງພຣະຢາເວ.
[18]ຈົ່ງພິຈາລະນາເບິ່ງຕັ້ງແຕ່ວັນນີ້ເປັນຕົ້ນໄປ, ນັບຈາກວັນທີຊາວສີ່ ເດືອນທີເກົ້າ, ຕັ້ງແຕ່ມື້ທີ່ຮາກຖານຂອງພຣະວິຫານຂອງພຣະຢາເວໄດ້ວາງລົງ.
ຈົ່ງພິຈາລະນາເບິ່ງສາ![19]ຍັງມີແນວປູກເຫລືອຢູ່ໃນເລົ້າຫລືບໍ່? ເຄືອອະງຸ່ນ, ຕົ້ນຫມາກເດື່ອເທດ, ຕົ້ນຫມາກພິລາ, ແລະ ຕົ້ນຫມາກກອກເທດ
ທີ່ຍັງບໍ່ເກີດຫມາກ! ຕັ້ງແຕ່ວັນນີ້ເປັນຕົ້ນໄປເຮົາຈະອວຍພອນແກ່ເຈົ້າ!"
[20]ແລ້ວພຣະທຳຂອງພຣະຢາເວກໍມາເຖິງຮັກກາຍ ຜູ້ປະກາດພຣະທຳເປັນເທື່ອທີສອງ ໃນວັນທີຊາວສີ່ຂອງເດືອນນັ້ນວ່າ,[21]"ຈົ່ງເວົ້າກັບຜູ້ປົກ-
ຄອງເມືອງຢູດາ, ເຊຣູບາເບນວ່າ, 'ເຮົາຈະສັ່ນຟ້າສະຫວັນ ແລະ ແຜ່ນດິນໂລກ.[22]ເພາະເຮົາຈະຂວ້ຳບັນລັງຂອງອານາຈັກຕ່າງໆ ແລະ
ທຳລາຍອຳນາດຂອງອານາຈັກ ຂອງຊົນຊາດເຫລົ່ານັ້ນ! ເຮົາຈະຂວ້ຳລົດມ້າຮົບເສິກແລະຜູ້ຂັບຂີ່ລົດນັ້ນ; ທັງມ້າ ແລະ ຜູ້ຂີ່ມ້າຈະລົ້ມລົງ,
ຄືທຸກຄົນຈະຖືກທຳລາຍດ້ວຍຄົມດາບຂອງພີ່ນ້ອງຂອງເຂົາ.
[23]ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ ຊົງກ່າວວ່າ, "ໃນວັນນັ້ນ—ເຮົາຈະຮັບເຈົ້າ, ເຊຣູບາເບນລູກຊາຍເຊອານຕິເອນ, ຜູ້ຮັບໃຊ້ຂອງເຮົາ
—ນີ້ຄືຄຳປະກາດຂອງພຣະຢາເວກ່າວວ່າ. ເຮົາຈະຕັ້ງເຈົ້າໃຫ້ເປັນແຫວນປະທັບ, ເພາະເຮົາໄດ້ເລືອກເຈົ້າແລ້ວ!—
ນີ້ຄືຄຳປະກາດຂອງພຣະຢາເວຈອມໂຢທາ ຊົງກ່າວດັ່ງນີ້ແຫລະ!'"

# ເຊຄາຣີຢາ

1 [1]ໃນເດືອນທີແປດຂອງປີທີສອງແຫ່ງຣາຊະການຂອງດາຣິອຸດ, ຖ້ອຍຄຳຂອງພຣະຢາເວມາເຖິງເຊຄາຣີຢາ ຜູ້ປະກາດພຣະທັມ ລູກຊາຍຂອງ
ເບເຣກີຢາ ແຫ່ງອິດໂດ, ຊົງກ່າວວ່າ,[2]"ພຣະຢາເວໄດ້ໂມໂຫຮ້າຍຕໍ່ບັນພະບຸຣຸດຂອງພວກເຈົ້າຢ່າງຍິ່ງ![3]ຈົ່ງກ່າວກັບພວກເຂົາວ່າ, ພຣະ-
ຢາເວຈອມໂຍທາ ຊົງກ່າວສິ່ງນີ້: ຈົ່ງຫັນມາຫາເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ—ແລະພຣະຢາເວຈອມໂຍທາຊົງກ່າວວ່າ,
ແລະເຮົາຈະກັບມາຫາພວກເຈົ້າ.

[4]ຈົ່ງຢ່າເປັນເຫມືອນບັນພະບຸຣຸດຂອງພວກເຈົ້າ ຜູ້ປະກາດພຣະທັມກ່ອນຫນ້ານີ້, ກ່າວວ່າ, "ພຣະຢາເວຈອມໂຍທາຊົງກ່າວວ່າ:
ຈົ່ງຫັນຈາກທາງຊົ່ວຮ້າຍ ແລະ ການກະທຳທີ່ຊົ່ວຊ້າຂອງພວກເຈົ້າ!" ແຕ່ພວກເຂົາບໍ່ໄດ້ຍິນ ແລະ ບໍ່ໄດ້ສົນໃຈເຮົາ—
ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.[5]ພວກບັນພະບຸຣຸດຂອງພວກເຈົ້າຢູ່ໃສ? ພວກຜູ້ປະກາດພຣະທັມຢູ່ໃສ,
ພວກເຂົາຢູ່ທີ່ນີ້ຕະລອດໄປເປັນນິດບໍ?[6]ແຕ່ຖ້ອຍຄຳຂອງເຮົາ ແລະ ຂໍ້ບັນຍັດທັງຫລາຍຂອງເຮົາທີ່ເຮົາ ໄດ້ບັນຊາແກ່ພວກຜູ້ປະກາດພຣະ-
ທັມທັງຫລາຍຂອງເຮົາ, ກໍໄດ້ຕາມທັນພວກບັນພະບຸຣຸດຂອງພວກເຈົ້າບໍ່ແມ່ນບໍ? ດັ່ງນັ້ນພວກເຂົາທັງຫລາຍຈຶ່ງໄດ້ກັບໃຈ ແລະເວົ້າວ່າ,
'ພຣະຢາເວຈອມໂຍທາໄດ້ວາງແຜນທີ່ຈະກະທຳກັບເຮົາຕາມທາງ ແລະ ການກະທຳທີ່ສົມຄວນຈະໄດ້ຮັບຂອງພວກເຮົາ,
ດັ່ງນັ້ນພຣະອົງຈຶ່ງໄດ້ຊົງໄດ້ກະທຳຢ່າງນັ້ນຕໍ່ພວກເຮົາ.'"

 generated on Tue Jun 17 19:01:42 2025

[7]ໃນວັນທີຊາວສີ່ຂອງເດືອນທີສິບເອັດ ຊຶ່ງເປັນເດືອນເຊບັດ, ໃນປີທີສອງຂອງກະສັດດາຣິອຸດ, ຖ້ອຍຄຳຂອງພຣະຢາເວໄດ້ມາເຖິງຜູ້ປະກາດ-
ພຣະທັມເຊຄາຣີຢາ ລູກຊາຍຂອງເບເຣກີຢາ, ຜູ້ເປັນລູກຊາຍຂອງອິດໂດ, ຊົງກ່າວວ່າ,[8]"ໃນເວລາກາງຄືນ ເຮົາໄດ້ເຫັນ, ແລະເປັນດັ່ງນີ້! ມີຊາຍ
ຄົນຫນຶ່ງຂີ່ມ້າສີແດງ, ແລະເຂົາຢູ່ທ່າມກາງຕົ້ນນ້ຳມັນຂຽວທີ່ຢູ່ພູເຂົາ; ແລະຢູ່ເບື້ອງຫລັງຂອງເຂົາມີມ້າສີແດງ, ສີດ່າງ, ແລະ ສີຂາວ.[9]ຂ້າພະເຈົ້າ
ຈຶ່ງຖາມວ່າ, 'ເຈົ້ານາຍເຈົ້າເອີຍ, ສິ່ງເຫລົ່ານີ້ແມ່ນຫຍັງ?" ຈາກນັ້ນເທວະດາຜູ້ທີ່ໄດ້ເວົ້າກັບຂ້າພະເຈົ້າໄດ້ກ່າວວ່າ,
ເຮົາຈະສະແດງໃຫ້ເຈົ້າຮູ້ວ່າສິ່ງເຫລົ່ານີ້ນີ້ແມ່ນອັນໃດ."
[10]ແລະຜູ້ຊາຍຄົນນັ້ນໄດ້ຢືນຂຶ້ນຢູ່ທ່າມກາງຕົ້ນນ້ຳມັນຂຽວ ໄດ້ຕອບ ແລະກ່າວວ່າ, "ຄົນເຫລົ່ານີ້ແມ່ນຄົນທັງຫລາຍທີ່ພຣະ-
ຢາເວໄດ້ສົ່ງອອກໄປທ່ຽວທົ່ວແຜ່ນດິນໂລກ."[11]ພວກເຂົາໄດ້ຕອບເທວະດາຂອງພຣະຢາເວ ຜູ້ທີ່ຢືນຢູ່ທ່າມກາງຕົ້ນນ້ຳມັນສີຂຽວວ່າ;
ພວກເຂົໄດ້ເວົ້າກັບລາວວ່າ, "ພວກເຮົາໄດ້ທ່ອງທ່ຽວໄປທົ່ວແຜ່ນດິນໂລກ; ເບິ່ງແມ, ທົ່ວແຜ່ນດິນຍັງຄົງພັກຜ່ອນຢູ່ຢ່າງສະຫງົບສຸກຢູ່."
[12]ຈາກນັ້ນເທວະດາຂອງພຣະຢາເວໄດ້ຕອບ ແລະ ເວົ້າວ່າ, "ພຣະຢາເວຈອມໂຍທາ, ອີກດົນປານໃດ ທີ່ພຣະອົງຈະບໍ່ສຳແດງຄວາມເມດຕາ
ສົງສານຕໍ່ນະຄອນເຢຣູຊາເລັມ ແລະ ຫົວເມືອງແຫ່ງຢູດາ ທີ່ໄດ້ທົນທຸກຢ່າງບໍ່ຫນ້າເພິ່ງພໍໃຈມາເປັນເວລາເຈັດສິບປີແລ້ວນັ້ນ?"[13]ພຣະຢາເວຕອບ
ເທວະດາ ຜູ້ຊຶ່ງເວົ້າກັບຂ້າພະເຈົ້າ ດ້ວຍຖ້ອຍຄຳທີ່ດີ, ຖ້ອຍຄຳແຫ່ງການເລົ້າໂລມໃຈ.
[14]ດັ່ງນັ້ນເທວະດາຜູ້ຊຶ່ງໄດ້ເວົ້າກັບຂ້າພະເຈົ້າວ່າ, ໄດ້ກ່າວຂຶ້ນວ່າ, 'ຈົ່ງຮ້ອງປະກາດ ແລະ ເວົ້າວ່າ, ' ພຣະຢາເວຈອມໂຍທາໄດ້ຊົງກ່າວສິ່ງນີ້ວ່າ:
ເຮົາມີຄວາມຫວງແຫນອັນໃຫຍ່ຫລວງຕໍ່ນະຄອນເຢຣູຊາເລັມ ແລະ ຊີໂອນ ດ້ວຍຄວາມຮັກທີ່ຍິ່ງໃຫຍ່![15]ເຮົາ
ໄດ້ໃຈຮ້າຍປະຊາຊົນທັງຫລາຍທີ່ຢູ່ຢ່າງສະບາຍຫລາຍ. ເມື່ອເຮົາໄດ້ໃຈຮ້າຍພຽງເລັກນ້ອຍກັບພວກເຂົາ, ພວກເຂົາໄດ້ເຮັດໄພພິບັດຢ່າງຮ້າຍ-
ແຮງເພີ່ມຂຶ້ນ.
[16]ດັ່ງນັ້ນພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ເຮົາໄດ້ກັບມາຍັງນະຄອນເຢຣູຊາເລັມດ້ວຍຄວາມເມດຕາ. ພຣະວິ-
ຫານຂອງເຮົາຈະຖືກສ້າງໃນນັ້ນ—ນີ້ຄືປະກາດຂອງພຣະຢາເວຈອມໂຍທາ ແລະ ເຊືອກວັດຈະຖືກຄຶງອອກເຫນືອນະຄອນເຢຣູຊາ-
ເລັມ!'[17]ຈົ່ງຮ້ອງປະກາດອີກຄັ້ງວ່າ, 'ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ເມືອງທັງຫລາຍຂອງເຮົາຈະເຕັມລົ້ນໄປດ້ວຍຄວາມດີງາມອີກຄັ້ງ,
'ແລະພຣະຢາເວຈະຊົງມາເລົ້າໂລມຈິດໃຈຊີໂອນອີກຄັ້ງ, ແລະ ພຣະອົງຈະເລືອກນະຄອນເຢຣູຊາເລັມອີກຄັ້ງ.'"
[18]ຂ້າພະເຈົ້າໄດ້ເງີຍຫນ້າຂຶ້ນ ແລະ ໄດ້ເຫັນເຂົາສັດສີ່ອັນ![19]ຂ້າພະເຈົ້າໄດ້ທູນຖາມກັບເທວະດາ ຜູ້ຊຶ່ງໄດ້ເວົ້າກັບຂ້ານ້ອຍວ່າ "ສິ່ງເຫລົ່ານີ້ຄື
ຫຍັງ?" ພວກເຂົາໄດ້ຕອບຂ້າພະເຈົ້າວ່າ, "ເຂົາເຫລົ່ານີ້ຄືເຂົາສັດທັງຫລາຍທີ່ໄດ້ເຮັດໃຫ້ຢູດາ, ອິດສະຣາເອນ ແລະ ນະຄອນເຢຣູ-
ຊາເລັມແຍກກະຈັດກະຈາຍໄປ."
[20]ຈາກນັ້ນພຣະຢາເວໄດ້ສຳແດງໃຫ້ຂ້ານ້ອຍເຫັນຊ່າງຝີມືສີ່ຄົນ. ຂ້ານ້ອຍຈຶ່ງຖາມວ່າ, "ຄົນເຫລົ່ານີ້ມາເຮັດຫຍັງ?[21]ພວກເຂົາໄດ້ຕອບ ແລະ
ເວົ້າວ່າ, "ເຫລົ່ານີ້ຄືເຂົາສັດທັງຫລາຍທີ່ເຮັດໃຫ້ຢູດາແຍກກະຈັດກະຈາຍໄປ, ດັ່ງນັ້ນຈຶ່ງບໍ່ມີຜູ້ໃດຍົກຫົວຂອງເຂົາຂຶ້ນ.
ແຕ່ຄົນເຫລົ່ານີ້ກຳລັງມາເພື່ອຂັບໄລ່ເຂົາສັດທັງຫລາຍຂອງບັນດາປະຊາຊາດທີ່ໄດ້ຍົກເຂົາສັດໃດໆ, ຂຶ້ນຕໍ່ສູ້ແຜ່ນດິນແຫ່ງຢູດາ ເພື່ອເຮັດ-
ໃຫ້ຢູດາແຍກກະຈັດກະຈາຍໄປ."


generated on Tue Jun 17 19:01:42 2025

2 1ຕໍ່ຈາກນັ້ນ ຂ້ານ້ອຍໄດ້ເງີຍຫນ້າຂຶ້ນອີກ ແລະ ໄດ້ເຫັນມີຊາຍຄົນຫນຶ່ງທີ່ມີເຊືອກວັດແທກຢູ່ໃນມື.2ຂ້າພະເຈົ້າໄດ້ຖາມວ່າ “ທ່ານກໍາລັງຈະໄປ
ໃສ?” ແລະເຂົາໄດ້ຕອບຂ້ານ້ອຍວ່າ, “ຈະໄປວັດແທກນະຄອນເຢຣູຊາເລັມ, ເພື່ອເບິ່ງຄວາມກວ້າງ ແລະຄວາມຍາວຂອງນະຄອນນັ້ນ.”

3ແລ້ວເທວະດາຜູ້ທີ່ໄດ້ເວົ້າກັບຂ້ານ້ອຍນັ້ນກໍໄດ້ຈາກໄປ ແລະ ເທວະດາອີກອົງຫນຶ່ງໄດ້ອອກໄປພົບເຂົາ.4ເທວະດາອົງທີສອງໄດ້ເວົ້າກັບເຂົາວ່າ,
“ຈົ່ງແລ່ນໄປ ແລະ ເວົ້າກັບຄົນຫນຸ່ມຄົນນັ້ນວ່າ, ‘ນະຄອນເຢຣູຊາເລັມຈະນັ່ງຢູ່ໃນຊົນນະບົດທີ່ໂລ່ງກວ້າງ ເພາະການເພີ່ມຂຶ້ນຂອງຈໍານວນຄົນ
ແລະ ສັດລ້ຽງໃນນະຄອນນັ້ນ.5ເພາະເຮົາ—ນີ້ເປັນຄໍາປະກາດຂອງພຣະຢາເວກ່າວ—ເຮົາຈະເປັນເຫມືອນກໍາແພງແປວໄຟອ້ອມເມືອງນັ້ນໄວ້,
ແລະເຮົາຈະເປັນສະຫງ່າຣາສີໃນທ່າມກາງເຈົ້າ.
6ນີ້ເປັນຄໍາປະກາດຂອງພຣະຢາເວ ຈົ່ງລຸກຂຶ້ນ!—ຈົ່ງຫນີໄປໃຫ້ພົ້ນຈາກແຜ່ນດິນແຫ່ງທິດເຫນືອ—ເພາະວ່າເຮົາໄດ້ເຮັດໃຫ້ພວກເຈົ້າພັດພາກ
ຈາກກັນໄປ ເຫມືອນລົມທັງສີ່ທິດຂອງແຫ່ງທ້ອງຟ້າ!—ນີ້ເປັນຄໍາປະກາດຂອງພຣະຢາເວ.7ຈົ່ງລຸກຂຶ້ນຫນີໄປຍັງຊີໂອນ, ພວກເຈົ້າຜູ້ທີ່ອາໄສຢູ່ກັບ
ລູກສາວຂອງບາບີໂລນ!'"
8ເພາະວ່າຫລັງຈາກທີ່ພຣະຢາເວຈອມໂຍທາໄດ້ໃຫ້ກຽດຂ້ານ້ອຍ ແລະ ສົ່ງຂ້ານ້ອຍໄປຕໍ່ສູ້ບັນດາປະຊາຊາດທີ່ໄດ້ປຸ້ນພວກເຈົ້າ—
ສໍາລັບໃຜກໍຕາມທີ່ໄດ້ແຕະຕ້ອງພວກເຈົ້າ, ແຕະຕ້ອງແກ້ວຕາຂອງພຣະເຈົ້າ!—ຫລັງຈາກພຣະຢາເວໄດ້ຊົງກະທໍາສິ່ງນີ້, ເຂົາໄດ້ເວົ້າວ່າ,9"ເຮົາ
ໂຕເຮົາເອງຈະສັ່ນມືຂອງເຮົາເຫນືອພວກເຂົາທັງຫລາຍ, ແລະ ພວກເຂົາຈະຖືກປຸ້ນ ເພື່ອໃຫ້ແກ່ທາດທັງຫລາຍຂອງພວກເຂົາ." ຈາກນັ້ນ ພວກ
ເຈົ້າຈະໄດ້ຮູ້ຈັກວ່າພຣະຢາເວຈອມໂຍທາໄດ້ສົ່ງຂ້ານ້ອຍມາ.
10"ລູກສາວຂອງຊີໂອນເອີຍ, ຈົ່ງໂຫ່ຮ້ອງດ້ວຍຄວາມຊື່ນຊົມຍິນດີເຖີດ, ເພາະວ່າເຮົາ ໂຕເຮົາເອງຈະເຂົ້າມາ ແລະ ສະຖິດຢູ່ທ່າມກາງພວກເຈົ້າ!
—ນີ້ເປັນຄໍາປະກາດຂອງພຣະຢາເວ."11ຈາກນັ້ນບັນດາປະຊາຊາດທັງຫລາຍຈະເຕົ້າໂຮມກັນມາຍັງພຣະຢາເວໃນວັນນັ້ນ. ພຣະອົງກ່າວ່າ,
"ຈາກນັ້ນພວກເຈົ້າຈະກາຍເປັນປະຊາກອນຂອງເຮົາ; ເພາະເຮົາຈະສະຖິດຢູ່ທ່າມກາງພວກເຈົ້າ," ແລະ ພວກເຈົ້າຈະຮູ້ວ່າພຣະ-
ຢາເວຈອມໂຍທາ ໄດ້ສົ່ງຂ້ານ້ອຍມາຫາພວກເຈົ້າ.
12ເພາະວ່າພຣະຢາເວຈະຮັບຢູດາເປັນສ່ວນມໍລະດົກ ເປັນກໍາມະສິດອັນຊອບທັມໃນແຜ່ນດິນສັກສິດຂອງພຣະອົງ ແລະພຣະອົງຈະຊົງເລືອກ
ນະຄອນເຢຣູຊາເລັມສໍາລັບພຣະອົງອີກຄັ້ງ.”13ຈົ່ງງຽບສະຫງົບ, ມະນຸດທັງຫມົດ, ຕໍ່ພຣະພັກພຣະຢາເວ, ເພາະວ່າພຣະ-
ອົງໄດ້ສະເດັດອອກຈາກບ່ອນສະຖິດຂອງພຣະອົງແລ້ວ!

 generated on Tue Jun 17 19:01:42 2025

3 [1]ແລ້ວເທວະດາໄດ້ຊີ້ງສະແດງໃຫ້ຂ້ານ້ອຍເຫັນໂຢຊວຍ ມະຫາປະໂລຫິດ ຊຶ່ງກຳລັງຢືນຢູ່ຕໍ່ຫນ້າເທວະດາຂອງພຣະຢາເວ ແລະ ຊາ-
ຕານຢືນຢູ່ຂ້າງຂວາມືຂອງເຂົາ ເພື່ອຈະກ່າວໂທດຄວາມບາບຂອງເຂົາ.[2]ເທວະດາຂອງພຣະຢາເວໄດ້ກ່າວຕໍ່ຊາຕານວ່າ, “ຂໍໃຫ້ພຣະ-
ຢາເວຕຳນິເຈົ້າຊາຕານ; ຂໍໃຫ້ພຣະຢາເວຜູ້ທີ່ຊົງເລືອກນະຄອນເຢຣູຊາເລັມ, ຕຳນິເຈົ້າ, ນີ້ບໍ່ແມ່ນເຫລັກຕີກາທີ່ໄດ້ຖືກອອກມາຈາກໄຟຫລື
?”[3]ເມື່ອໂຢຊວຍໄດ້ຢືນຢູ່ຕໍ່ຫນ້າເທວະດາ ເຂົາໄດ້ນຸ່ງເຄື່ອງເປິເປື້ອນ!

[4]ເທວະດາໄດ້ເວົ້າ ແລ ກ່າວກັບຄົນເຫລົ່ານັ້ນທີ່ໄດ້ຍິນຕໍ່ຫນ້າເຂົາວ່າ, “ຈົ່ງຖອດເຄື່ອງນຸ່ງເປື້ອນອອກຈາກເຂົາ.” ຈາກນັ້ນເຂົາໄດ້ກ່າວກັບໂຢ-
ຊວຍວ່າ, "ຈົ່ງເບິ່ງແມ! ເຮົາໄດ້ເປັນເຫດນຳເອົາຄວາມຜິດບາບຂອງເຈົ້າອອກໄປຈາກເຈົ້າແລ້ວ ແລະ ເຮົາຈະໃຫ້ເຈົ້ານຸ່ງ
ເຄື່ອງໃຫມ່ດ້ວຍເສື້ອຜ້າທີ່ດີ ”[5]ຈາກນັ້ນເຂົາໄດ້ກ່າວວ່າ, “ຈົ່ງເອົາຜ້າແພບໍຣິສຸດມາຄຽນຫົວຂອງເຂົາ!” ດັ່ງນັ້ນພວກເຂົາຈຶ່ງເອົາຜ້າແພບໍຣິສຸດ
ມາຄຽນຫົວຂອງໂຢຊວຍ ແລະແຕ່ງຕົວດ້ວຍເສື້ອຜ້າທີ່ສະອາດ ໃນຂະນະທີ່ເທວະດາຂອງພຣະຢາເວກຳລັງຢືນຢູ່ຂ້າງໆ.
[6]ຕໍ່ຈາກນັ້ນເທວະດາຂອງພຣະຢາເວໄດ້ສັ່ງໂຢຊວຍຢ່າງຈິງຈັງ ແລະ ໄດ້ເວົ້າວ່າ,[7]“ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ຖ້າເຈົ້າດຳເນີນໃນບັນດາ
ທາງຂອງເຮົາ ແລະ ຖ້າເຈົ້າຮັກສາກົດບັນຍັດທັງຫລາຍຂອງເຮົາ ແລ້ວເຮົາຈະໃຫ້ເຈົ້າໄດ້ປົກຄອງພຣະວິຫານຂອງເຮົາ ແລະ ເບິ່ງແຍງ
ສະຖານທີ່ຂອງເຮົາ, ເພາະວ່າເຮົາຈະອະນຸຍາດໃຫ້ເຈົ້າໄປ ແລະ ເຂົ້າມາທ່າມກາງພວກເຫລົ່ານີ້ທີ່ເຝົ້າຢູ່ຕໍ່ໜ້າເຮົາ.
[8]ໂຢຊວຍມະຫາປະໂລຫິດ, ຈົ່ງຟັງ, ເຈົ້າ ແລະ ພວກເພື່ອນທັງຫລາຍຂອງເຈົ້າຜູ້ອາໄສຢູ່ກັບເຈົ້າ! ເພາະວ່າຄົນທັງຫລາຍເຫລົ່ານີ້ເປັນຫມາຍ
ສຳຄັນ, ສຳລັບເຮົາ ເຮົາເອງຈະນຳກິ່ງກ້ານຜູ້ຮັບໃຊ້ຂອງເຮົາມາ.[9]ບັດນີ້ ຈົ່ງເບິ່ງທີ່ກ້ອນຫີນກ້ອນນັ້ນທີ່ເຮົາໄດ້ຕັ້ງໄວ້ຕໍ່ຫນ້າຂອງໂຢຊວຍ ທີ່ມີ
ດວງຕາເຈັດຫນ່ວຍຢູ່ເທິງກ້ອນຫີນດຽວນີ້, ແລະ ເຮົາຈະຈາຮຶກຂໍ້ຄວາມໄວ້—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ—ແລະ ເຮົາ
ຈະກຳຈັດຄວາມຜິດບາບອອກຈາກແຜ່ນດິນນີ້ພາຍໃນຫນຶ່ງມື້.
[10]ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ ກ່າວວ່າ—ໃນວັນນັ້ນ—ແຕ່ລະຄົນຈະເຊີນເພື່ອນບ້ານຂອງເຂົາ ໃຫ້ມານັ່ງກ້ອງຕົ້ນອະງຸ່ນຂອງເຂົາ
ແລະ ຢູ່ກ້ອງຕົ້ນຫມາກເດື່ອເທດຂອງພວກເຂົາ.”

 generated on Tue Jun 17 19:01:42 2025

# 4

[1]ຈາກນັ້ນເທວະດາຜູ້ທີ່ໄດ້ກຳລັງເວົ້າກັບຂ້ານ້ອຍໄດ້ຫລຽວມາ ແລະໄດ້ປຸກຂ້ານ້ອຍເຫມືອນປຸກຜູ້ຊາຍຄົນຫນຶ່ງໃຫ້ຕື່ນຈາກການນອນ
ຫລັບຂອງເຂົາ.[2]ເຂົາໄດ້ເວົ້າກັບຂ້ານ້ອຍວ່າ, "ເຈົ້າເຫັນຫຍັງ?" ຂ້ານ້ອຍໄດ້ຕອບວ່າ "ຂ້ານ້ອຍໄດ້ເຫັນເຄື່ອງຮອງຕີນໂຄມອັນຫນຶ່ງທີ່ເຮັດ
ດ້ວຍທອງຄຳລ້ວນໆ ແລະມີຈອກ ເທິງຍອດຂອງມັນ ແລະມີໂຄມໄຟເຈັດຫນ່ວຍຢູ່ເທິງເຄື່ອງຮອງຕີນໂຄມ ແລະມີຮາງລິນເຈັດຮາງສຳລັບໂຄມໄຟ
ທຸກຫນ່ວຍທີ່ຢູ່ເທິງຍອດໂຄມນັ້ນ.[3]ມີຕົ້ນຫມາກກອກເທດສອງຕົ້ນຢູ່ໃກ້ໂຄມໄຟ, ຕົ້ນຫນຶ່ງຢູ່ທາງເບື້ອງຂວາຂອງຈອກ, ແລະຕົ້ນຫນຶ່ງຕົ້ນຫນຶ່ງຢູ່
ເບື້ອງຊ້າຍ"

[4]ດັ່ງນັ້ນຂ້າພະເຈົ້າທູນຖາມເທວະດາຜູ້ທີ່ກຳລັງເວົ້າກັບຂ້ານ້ອຍວ່າ, "ເຈົ້ານາຍຂອງຂ້ານ້ອຍເອີຍ, ສິ່ງເຫລົ່ານີ້ຫມາຍເຖິງ
ຫຍັງ?"[5]ເທວະດາທີ່ກຳລັງເວົ້າຂ້ານ້ອຍໄດ້ຕອບ ແລະເວົ້າຂ້ານ້ອຍວ່າ, "ເຈົ້າບໍ່ຮູ້ຫລືວ່າສິ່ງເຫລົ່ານີ້ຄືຫຍັງ?" ຂ້ານ້ອຍໄດ້ຕອບວ່າ "ເຈົ້າ
ນາຍຂອງຂ້ານ້ອຍເອີຍ, ຂ້ານ້ອຍບໍ່ຮູ້."
[6]ດັ່ງນັ້ນເຂົາໄດ້ເວົ້າກັບຂ້າພະເຈົ້າວ່າ, "ນີ້ເປັນຖ້ອຍຄຳຂອງພຣະຢາເວເຖິງເຊຣູບາເບນຄື: ບໍ່ແມ່ນດ້ວຍກຳລັງ, ບໍ່ແມ່ນດ້ວຍອຳນາດ, ແຕ່ດ້ວຍ
ພຣະວິນຍານຂອງເຮົາ, ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ."[7]ໂອ ພູເຂົາທີ່ຍິ່ງໃຫຍ່, ເຈົ້າເປັນອັນໃດ? ຕໍ່ຫນ້າເຊຣູບາເບນ, ເຈົ້າຈະກາຍ
ເປັນທົ່ງຮາບພຽງ ແລະເຂົາຈະນຳກ້ອນຫີນທີ່ຢູ່ເທິງຍອດພູອອກມາ ເພື່ອໂຫ່ຮ້ອງວ່າ, 'ພຣະຄຸນ! ພຣະຄຸນສຳລັບຫີນນັ້ນ!'"
[8]ຖ້ອຍຄຳຂອງພຣະຢາເວໄດ້ມາເຖິງຂ້ານ້ອຍກ່າວວ່າ.[9]"ມືຂອງເຊຣູບາເບນໄດ້ວາງຮາກຖານຂອງພຣະວິຫານນີ້ ແລະມືຂອງເຂົາຈະ
ນຳມາສູ່ຄວາມສຳເລັດ. ຈາກນັ້ນເຈົ້າຈະຮູ້ວ່າ ພຣະຢາເວຈອມໂຍທາໄດ້ສົ່ງຂ້ານ້ອຍມາຫາເຈົ້າ.[10]ຜູ້ໃດທີ່ຫມິ່ນປະຫມາດວັນແຫ່ງການເລັກນ້ອຍ
ເຫລົ່ານັ້ນ? ປະຊາຊົນເຫລົ່ານັ້ນຈະໄດ້ຊົມຊື່ນຍິນດີ ແລະຈະໄດ້ເຫັນສາຍດິ່ງທີ່ຢູ່ໃນມືຂອງເຊຣູບາເບນ (ພ້ອມກັບໂຄມໄຟທັງເຈັດດວງເຫລົ່ານັ້ນ
ຄືບັນດາພຣະເນດຂອງພຣະຢາເວ ທີ່ຊົງຫລຽວເບິ່ງຢູ່ທົ່ວແຜ່ນດິນໂລກ)."[11]ຈາກນັ້ນຂ້ານ້ອຍໄດ້ທູນຖາມເທວະດານັ້ນວ່າ, "ຕົ້ນຫມາກກອກເທດ
ສອງຕົ້ນທີ່ຢູ່ເບື້ອງຂວາ ແລະເບື້ອງຊ້າຍຂອງເຄື່ອງຮອງຕີນໂຄມນັ້ນແມ່ນຫຍັງ?"
[12]ຂ້ານ້ອຍໄດ້ຖາມເຂົາອີກຄັ້ງວ່າ, "ກິ່ງກ້ານຕົ້ນຫມາກກອກເທດທັງສອງກິ່ງກ້ານທີ່ມີນ້ຳມັນ ສີທອງໄຫລລົງມາແມ່ນຫຍັງ?"[13]ແລະເຂົາໄດ້ຕອບ-
ກັບຂ້ານ້ອຍວ່າ, "ເຈົ້າບໍ່ຮູ້ຈັກບໍ່ວ່າສິ່ງນັ້ນແມ່ນຫຍັງ?" ຂ້ານ້ອຍາຕອບວ່າ, "ເຈົ້ານາຍຂອງຂ້ານ້ອຍເອີຍ, ຂ້ານ້ອຍບໍ່ຮູ້ຈັກ."
[14]ດັ່ງນັ້ນ ເທວະດາໄດ້ຕອບວ່າ, "ສິ່ງເຫລົ່ານີ້ຄືລູກຊາຍທັງຫລາຍທີ່ໄດ້ຮັບການເຈີມ ຜູ້ທີ່ຢືນຢູ່ຂ້າງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກທັງສິ້ນ"

 generated on Tue Jun 17 19:01:42 2025

5 [1]ຈາກນັ້ນຂ້ານ້ອຍຖອຍຫລັງກັບ ແລະເງີຍຫນ້າຂຶ້ນອີກ ກໍຫລຽວເຫັນຫນັງສືມ້ວນຫນຶ່ງເຫາະຢູ່.[2]ເທເວະດານັ້ນຈຶ່ງເວົ້າກັບຂ້ານ້ອຍວ່າ, “ເຈົ້າ
ເຫັນຫຍັງ” ຂ້ານ້ອຍໄດ້ຕອບວ່າ, “ຂ້ານ້ອຍເຫັນຫນັງສືມ້ວນຫນຶ່ງເຫາະຢູ່, ມັນຍາວຊາວສອກ ແລະກວ້າງສິບສອກ.”

[3]ແລ້ວເຂົາໄດ້ເວົ້າກັບຂ້ານ້ອຍວ່າ, “ນີ້ແຫລະເປັນຄຳສາບແຊ່ງທີ່ແຜ່ອອກໄປທົ່ວພື້ນແຜ່ນດິນໂລກ, ພວກໂຈນຂີ້ລັກທຸກຄົນຈະຖືກກຳຈັດອອກໄປ
ຕາມທີ່ຂຽນໄວ້ຂ້າງເບື້ອງຫນຶ່ງ ແລະທຸກຄົນທີ່ກ່າວຄຳສາບານບໍ່ຈິງ ຈະຕ້ອງຖືກກຳຈັດອອກຕາມບ່ອນທີ່ຂຽນໄວ້ໃນນັ້ນອີກເບື້ອງຫນຶ່ງ.
[4]ເຮົາຈະສົ່ງມັນອອກໄປ—ນີ້ຄືຄຳປະກາດຂອງພຣະຢາເວຈອມໂຍທາ—ດັ່ງນັ້ນ ມັນຈະເຂົ້າໄປໃນເຮືອນຂອງຂີ້ລັກນັ້ນ ແລະເຂົ້າໄປໃນເຮືອນຂອງ
ຄົນທີ່ສາບານບໍ່ຈິງ ໂດຍອອກນາມຂອງເຮົາ. ມັນຈະຍັງຄົງຢູ່ໃນບ້ານຂອງເຂົາ ແລະເຜົາໄຫມ້ທ່ອນໄມ້ ແລະ ກ້ອນຫີນທັງຫລາຍໃນເຮືອນນັ້ນ.”
[5]ຈາກນັ້ນເທວະດາຜູ້ທີ່ເວົ້າກັບຂ້ານ້ອຍໄດ້ອອກ ແລະ ເວົ້າກັບຂ້ານ້ອຍວ່າ, “ຈົ່ງເງີຍຫນ້າຂຶ້ນ ແລະເບິ່ງວ່າ ສິ່ງທີ່ກຳລັງມານັ້ນ!”[6]ຂ້ານ້ອຍໄດ້ເວົ້າ-
ວ່າ, “ສິ່ງນັ້ນແມ່ນຫຍັງ?” ເຂົາໄດ້ຕອບວ່າ “ນີ້ຄືກະຕ່າບັນຈຸຫນຶ່ງເອຟາທີ່ກຳລັງຈະມາ. ນີ້ຄືຄວາມຜິດບາບຂອງເຂົາທັງຫລາຍໃນທົ່ວແຜ່ນດິນ
ທັງສິ້ນ."[7]ແລ້ວຝາເອຟາທີ່ປິດກະຕ່າໄດ້ເປີດອອກ ແລະມີຜູ້ຍິງຄົນຫນຶ່ງນັ່ງຢູ່ໃນນັ້ນ!
[8]ເທວະດາໄດ້ກ່າວວ່າ “ນີ້ແມ່ນຄວາມຊົ່ວຮ້າຍ!” ເທວະດາໄດ້ໂຍນຍິງນັ້ນເຂົ້າໃນກະຕ່າ, ແລ້ວເຂົາກໍເອົາຝາທີ່ເຮັດດ້ວຍຂີ້ກົ່ວປິດປາກມັນໄວ້.
[9]ແລ້ວຂ້ານ້ອຍກໍເງີຍຫນ້າຂຶ້ນຫລຽວເຫັນຜູ້ຍິງສອງຄົນອອກມາ, ແລະມີລົມຢູ່ໃນປີກຂອງນາງ—ເພາະວ່າພວກນາງມີປີກນັ້ນຄ້າຍຄືປີກຂອງນົກ
ຊຸ້ມ. ພວກນາງໄດ້ຍົກກະຕ່າເອຟາຂຶ້ນລະຫວ່າງແຜ່ນດິນໂລກ ແລະ ທ້ອງຟ້າ.
[10]ດັ່ງນັ້ນຂ້ານ້ອຍໄດ້ເວົ້າກັບເທວະດາຜູ້ເວົ້າກັບຂ້ານ້ອຍວ່າ, “ນາງເຫລົ່ານັ້ນຈະເອົາກະຕ່າເອຟາໄປໃສ?”[11]ເຂົາໄດ້ເວົ້າກັບຂ້ານ້ອຍວ່າ, “ໄປ
ສ້າງພຣະວິຫານໃນແຜ່ນດິນຊີນາຍ ສຳລັບມັນ, ດັ່ງນັ້ນເມື່ອພຣະວິຫານສຳເລັດແລ້ວ, ກະຕ່ານັ້ນຈະຖືກຈັດໄວ້ທີ່ນັ້ນເທິງແທ່ນ
ບ່ອນທີ່ມັນໄດ້ຈັດຕຽມໄວ້.”

 generated on Tue Jun 17 19:01:42 2025

# 6

[1]ຈາກນັ້ນຂ້ານ້ອຍໄດ້ຫັນກັບມາ ແລະ ໄດ້ເງີຍຫນ້າຂຶ້ນເບິ່ງ ແລະໄດ້ເຫັນລົດມ້າຮົບສີ່ຄັນກຳລັງອອກມາລະຫວ່າງກາງພູເຂົາສອງຫນ່ວຍ;
ແລະພູເຂົານັ້ນເຮັດມາຈາກທອງແດງ.[2]ລົດມ້າຮົບຄັນທຳອິດມີມ້າສີແດງ, ຄັນທີສອງມີມ້າສີດຳ,[3]ລົດມ້າຄັນທີສາມມ້າສີຂາວ, ແລະລົດມ້າຄັນທີສີ່
ມ້າດ່າງສີເທົາ.[4]ດັ່ງນັ້ນຂ້ານ້ອຍໄດ້ຖາມເທວະດາ ຜູ້ທີ່ເວົ້າກັບຂ້ານ້ອຍວ່າ, "ເຈົ້ານາຍຂອງຂ້ານ້ອຍເອີຍ, ສິ່ງເຫລົ່ານີ້ແມ່ນຫຍັງ?"

[5]ເທວະດານັ້ນໄດ້ຕອບ ແລະໄດ້ບອກຂ້ານ້ອຍວ່າ, "ສິ່ງເຫລົ່ານີ້ເປັນລົມທັງສີ່ແຫ່ງທ້ອງຟ້າ ທີ່ອອກມາຈາກສະຖານທີ່ຂອງພວກເຂົາທັງຫລາຍ ໄດ້
ຢືນຢູ່ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກທັງຫລາຍ.[6]ຄົນກັບລົດທີ່ມີມ້າດຳທັງຫລາຍກຳລັງຈະອອກໄປປະເທດທາງທິດເຫນືອ;
ມ້າສີຂາວທັງຫລາຍກຳລັງຈະອອກໄປປະເທດຕາເວັນຕົກ ແລະມ້າລາຍທັງຫລາຍກຳລັງຈະອອກໄປປະເທດທາງໃຕ້."
[7]ມ້າແຂງແຮງເຫລົ່ານີ້ໄດ້ອອກໄປແລະສະແຫວງຫາ ແລະຈະສຳຫລວດໄປທົ່ວແຜ່ນດິນໂລກ, ດັ່ງນັ້ນທູດສະຫວັນໄດ້ບອກວ່າ, "ຈົ່ງອອກໄປ,
ແລະສຳຫລວດແຜ່ນດິນໂລກ!" ແລະພວກມັນໄດ້ໄປແລະສຳຫລວດທົ່ວແຜ່ນດິນໂລກ.[8]ຈາກນັ້ນທູດສະຫວັນໄດ້ຮ້ອງຫາຂ້ານ້ອຍວ່າ, "ເບິ່ງແມ
ມ້າເຫລົ່ານີ້ທີ່ອອກໄປຍັງປະເທດທາງທິດເຫນືອ; ພວກເຂົາຈະຕອບສະຫນອງພຣະວິນຍານຂອງເຮົາກ່ຽວກັບປະເທດທາງທິດເຫນືອ"
[9]ດັ່ງນັ້ນຖ້ອຍຄຳຂອງພຣະຢາເວໄດ້ມາເຖິງຂ້ານ້ອຍ, ກ່າວວ່າ,[10]"ຈົ່ງນຳເອົາຂອງຖວາຍຈາກບັນດາຊະເລີຍ ຄືຈາກເຮນດາຍ ໂຕບີຢາ, ແລະເຢ-
ດາຢາ—ແລະໃນວັນດຽວກັນນັ້ນ ແລະຈົ່ງເຂົ້າໄປໃນເຮືອນຂອງໂຢສີຢາ ລູກຊາຍເຊຟານີຢາ, ຜູ້ທີ່ໄດ້ອອກມາຈາກນະຄອນບາບີໂລນ.[11]ຈົ່ງເອົາ
ເງິນແລະຄຳ, ເຮັດເປັນມົງກຸດອັນຫນຶ່ງ ແລ້ວສວມໃສ່ເທິງຫົວຂອງໂຢຊວຍລູກຊາຍເຢໂຮຊາດັກ, ມະຫາປະໂລຫິດ.
[12]ຈົ່ງເວົ້າກັບເຂົາ ແລະກ່າວວ່າ, 'ພຣະຢາເວຈອມໂຍທາໄດ້ກ່າວດັ່ງນີ້: ຊາຍຄົນນີ້, ມີຊື່ວ່າ ກິ່ງ! ເຂົາຈະເຕີບໂຕໃນສະຖານທີ່ໆເຂົາຢູ່
ແລະຈາກນັ້ນເຂົາຈະສ້າງພຣະວິຫານຂອງພຣະຢາເວ.[13]ເຂົານັ້ນແຫລະຈະເປັນຜູ້ສ້າງພຣະວິຫານຂອງພຣະຢາເວ ແລະເຂົາຈະໄດ້ຮັບ
ສະຫງ່າຣາສີອັນຍິ່ງໃຫຍ່ຂອງມັນ, ແລ້ວເຂົາຈະນັ່ງແລະປົກຄອງຢູ່ເທິງຣາຊະບັນລັງຂອງເຂົາ. ເຂົາຈະເປັນປະໂລຫິດຄົນຫນຶ່ງຢູ່ເທິງ
ຣາຊະບັນລັງຂອງເຂົາ ແລະຄວາມເຂົ້າໃຈແຫ່ງສັນຕິສຸກຈະມີຢູ່ລະຫວ່າງສອງຝ່າຍ.
[14]ມົງກຸດຈະຖືກວາງໄວ້ໃນພຣະວິຫານຂອງພຣະຢາເວ ເພື່ອເປັນທີ່ລະນຶກເຖິງເຮນດາຍ, ໂຕບີຢາ, ເຢດາຢາ, ແລະເຮັນ ລູກຊາຍຂອງເຊຟານີ-
ຢາ.[15]ແລ້ວຄົນເຫລົ່ານັ້ນຜູ້ທີ່ຢູ່ໄກຈະມາແລະສ້າງພຣະວິຫານຂອງພຣະຢາເວຈອມໂຍທາ, ດັ່ງນັ້ນທ່ານຈະຮູ້ວ່າ
ພຣະຢາເວຈອມໂຍທາໄດ້ສົ່ງຂ້ານ້ອຍມາຫາພວກທ່ານ; ເພາະນີ້ຈະເກີດຂຶ້ນ ຖ້າພວກທ່ານເຊື່ອຟັງສຽງຂອງພຣະຢາເວ ພຣະເຈົ້າຂອງ
ຢ່າງແທ້ຈິງ!"


generated on Tue Jun 17 19:01:42 2025

7 [1]ເມື່ອກະສັດດາຣິອຸດ ໄດ້ປົກຄອງເປັນເວລາສີ່ປີ, ໃນວັນທີສີ່ເດືອນທີເກົ້າ (ຊຶ່ງເປັນເດືອນກິດຊະເລັບ), ຖ້ອຍຄຳຂອງພຣະຢາເວໄດ້ມາເຖິງ
ເຊຄາຣີຢາ.[2]ປະຊາຊົນເມືອງໄດ້ສົ່ງຊາເຣັດເຊ ແລະ ເຣເກມເມເລັກ ແລະພັກພວກຂອງເຂົາ ເພື່ອຮ້ອງທູນຕໍ່ພຣະພັກພຣະຢາເວ.
[3]ພວກເຂົາໄດ້ກ່າວຕໍ່ບັນດາປະໂລຫິດ ຜູ້ຊຶ່ງໄດ້ຢູ່ໃນພຣະວິຫານຂອງພຣະຢາເວຈອມໂຍທາ ແລະຕໍ່ພວກຜູ້ປະກາດພຣະທັມ;
ພວກເຂົາໄດ້ກ່າວວ່າ, “ຄວນທີ່ຂ້ານ້ອຍຈະໄວ້ທຸກໆໃນເດືອນທີຫ້າດ້ວຍການອົດອາຫານ ເຫມືອນທີ່ຂ້ານ້ອຍໄດ້ເຮັດມາແລ້ວໃນຫລາຍປີຫລືບໍ?”

[4]ດັ່ງນັ້ນ ຖ້ອຍຄຳຂອງພຣະຢາເວຈອມໂຍທາ ໄດ້ມາເຖິງຂ້ານ້ອຍ, ກ່າວວ່າ,[5]"ຈົ່ງເວົ້າກັບບັນດາປະຊາຊົນທັງຫມົດຂອງແຜ່ນດິນ ແລະກັບປະໂລ-
ຫິດທັງຫລາຍ ແລະເວົ້າວ່າ, 'ເມື່ອພວກເຈົ້າອົດອາຫານແລະໄວ້ທຸກໃນເດືອນທີຫ້າ ແລະ ເດືອນທີເຈັດເປັນເວລາດົນເຖິງເຈັດສິບປີນັ້ນ, ພວກເຈົ້າ
ໄດ້ອົດອາຫານເພື່ອເຮົາແທ້ຫລືບໍ?[6]ເມື່ອພວກເຈົ້າໄດ້ກິນແລະດື່ມ, ພວກເຈົ້າໄດ້ກິນແລະດື່ມເພື່ອຕົວຂອງເຈົ້າເອງຫລື?
[7]ຖ້ອຍຄຳເຫລົ່ານີ້ເປັນພຣະທັມ ຊຶ່ງພຣະຢາເວໄດ້ປະກາດ ໂດຍຜ່ານປາກຂອງຜູ້ປະກາດພຣະທັມຮຸ່ນກ່ອນໆ,
ເມື່ອຕອນພວກເຈົ້າຍັງຄົງໄດ້ຢູ່ໃນນະຄອນເຢຣູຊາເລັມ ແລະເມືອງທັງຫລາຍຈະເລີນຮຸ່ງເຮືອງໂດຍອ້ອມຮອບ ແລະໄດ້ຕັ້ງຖິ່ນຖານໃນເນເກບ,
ແລະເຂດທົ່ງພຽງທາງທິດຕາເວັນຕົກຫລື?”
[8]ຖ້ອຍຄຳຂອງພຣະຢາເວໄດ້ມາເຖິງເຊຄາຣີຢາ, ກ່າວວ່າ,[9]“ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ, 'ຈົ່ງຕັດສິນຕາມຄວາມຍຸດຕິທັມຢ່າງແທ້ຈິງ,
ຕາມພັນທະສັນຍາທີ່ສັດຊື່, ແລະດ້ວຍຄວາມເມດຕາ. ໃຫ້ແຕ່ລະຄົນເຮັດສິ່ງນີ້ກັບພີ່ນ້ອງຂອງເຂົາ.[10]ກ່ຽວກັບແມ່ຫມ້າຍ ແລະລູກກຳພ້າ, ຄົນ
ຕ່າງດ້າວຫລືຄົນຍາກຈົນ—ຢ່າກົດຂີ່ຂົ່ມເຫັງພວກເຂົາ, ແລະ ຢ່າໃຫ້ພວກເຈົ້າຄົນໃດຄິດອຸບາຍຊົ່ວໃນໃຈ ທີ່ຈະທຳຮ້າຍຄົນອື່ນ.”
[11]ແຕ່ພວກເຂົາປະຕິເສດທີ່ຈະເອົາໃຈໃສ່ ແລະຍົກບ່າຂຶ້ນຢ່າງດື້ດຶງ. ພວກເຂົາໄດ້ອັດຫູຂອງພວກເຂົາ ດັ່ງນັ້ນພວກເຂົາຈຶ່ງຈະບໍ່ໄດ້ຍິນ.[12]ພວກເຂົາ
ໄດ້ເຮັດໃຫ້ຈິດໃຈຂອງຕົນແຂງກະດ້າງເຫມືອນຫີນ ດັ່ງນັ້ນພວກເຂົາຈຶ່ງບໍ່ໄດ້ຍິນພຣະບັນຍັດ ຫລື
ຖ້ອຍຄຳທັງຫລາຍຂອງພຣະຢາເວຈອມໂຍທາ. ພຣະອົງໄດ້ສົ່ງຂໍ້ຄວາມເຫລົ່ານີ້ໄປເຖິງປະຊາຊົນ
ໂດຍພຣະວິຍານຂອງພຣະອົງໃນສະໄຫມເລີ່ມຕົ້ນ, ໂດຍຜ່ານປາກຂອງຜູ້ປະກາດພຣະຄັມທັງຫລາຍ. ແຕ່ພວກປະຊາຊົນໄດ້ປະຕິເສດທີ່ຈະຟັງ,
ດັ່ງນັ້ນ ພຣະຢາເວຈອມໂຍທາຊົງໂກດຮ້າຍຕໍ່ພວກເຂົາຢ່າງຫນັກ.
[13]ມັນໄດ້ເກີດຂຶ້ນເມື່ອພຣະອົງໄດ້ຊົງເອີ້ນ, ແຕ່ພວກເຂົາບໍ່ຟັງ. ດ້ວຍວິທີການດຽວກັນ,“ ພຣະຢາເວຈອມໂຍທາໄດ້ຊົງກ່າວ, "ພວກເຂົາ
ຈະຮ້ອງທູນຕໍ່ເຮົາ, ແຕ່ເຮົາຈະບໍ່ຟັງ.[14]ເພາະເຮົາຈະກະຈັດກະຈາຍພວກເຂົາໄປດ້ວຍ
ລົມຫົວກຸດໄປເຖິງປະຊາຊາດທັງຫລາຍທີ່ພວກເຂົາບໍ່ໄດ້ເຫັນ, ແລະແຜ່ນດິນນັ້ນຈະຖືກຮ້າງເປົ່າຫລັງຈາກພວກເຂົາ. ເພາະວ່າຈະບໍ່ມີໃຜ
ຫຽວຜ່ານແຜ່ນດິນນັ້ນ ຫລື ກັບມາຫາມັນອີກ ຕັ້ງແຕ່ປະຊາຊົນນັ້ນໄດ້ເຮັດໃຫ້ແຜ່ນດິນເປັນຫນ້າເພິງພໍໃຈຂອງພວກເຂົາ
ໄດ້ກາຍເປັນຮົກຮ້າງວ່າງເປົ່າ."


generated on Tue Jun 17 19:01:42 2025

8 [1]ຖ້ອຍຄຳຂອງພຣະຢາເວຈອມໂຍທາ ໄດ້ມາເຖິງຂ້ານ້ອຍ, ກ່າວວ່າ,[2]“ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ເຮົາຫວງແຫນຊີໂອນອັນຍິ່ງ-
ໃຫຍ່ ແລະເຮົາຫວງແຫນນາງດ້ວຍຄຽດຮ້າຍອັນຍິ່ງໃຫຍ່![3]ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ເຮົາຈະກັບໄປຫາຊີໂອນ ແລະ
ຈະອາໄສໃນທ່າມກາງນະຄອນເຢຣູຊາເລັມ, ເພາະວ່າເຢຣູຊາເລັມຈະຖືກເອີ້ນວ່າເມືອງແຫ່ງຄວາມຈິງ ແລະພູເຂົາຂອງພຣະຢາເວຈອມໂຍທາ
ຈະຖືກເອີ້ນວ່າພູເຂົາບໍຣິສຸດ!

[4]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ຊາຍເຖົ້າແລະຍິງເຖົ້າຈະອາໄສຢູ່ຕາມຖະຫນົນໃນນະຄອນເຢຣູຊາເລັມອີກຄັ້ງ, ແລະທຸກຄົນຕ້ອງມີໄມ້-
ຄ້ອນເທົ້າຢູ່ໃນມືຂອງເຂົາ ເພາະວ່າເຂົາເຖົ້າແລ້ວ.[5]ຖະຫນົນຕ່າງໆຂອງເມືອງນັ້ນຈະເຕັມໄປດ້ວຍພວກເດັກຊາຍ ແລະ ພວກເດັກຍິງ ທີ່ກຳລັງ
ແລ່ນຫລິ້ນຢູ່ໃນນັ້ນ.
[6]ພຣະຢາເວຈອມໂຍທາໄດ້ຊົງກ່າວດັ່ງນີ້ວ່າ: ໃນວັນເຫລົ່ານັ້ນ ຖ້າບາງສິ່ງເບິ່ງຄືຈະເປັນໄປບໍ່ໄດ້ ໃນສາຍຕາຂອງຄົນທີ່ເຫລືອຢູ່ນີ້,
ມັນຄວນເບິ່ງຄືເປັນໄປບໍ່ໄດ້ໃນສາຍຕາຂອງເຮົາຄືກັນບໍ?[7]ພຣະຢາເວຈອມໂຍທາກ່າວດັ່ງນີ້ວ່າ: ເບິ່ງແມ, ເຮົາຕ້ອງການຊ່ວຍປະຊາຊົນຂອງເຮົາ
ຈາກດິນແດນທີ່ທິດຕາເວັນຂຶ້ນ ແລະ ຈາກດິນແດນແຫ່ງທິດຕາເວັນຕົກ.[8]ເພາະວ່າເຮົາຈະນຳພວກເຂົາກັບມາ, ແລະ ພວກເຂົາຈະອາໄສຢູ່ທ່າມ-
ກາງນະຄອນເຢຣູຊາເລັມ, ດັ່ງນັ້ນພວກເຂົາຈະເປັນປະຊາຊົນຂອງເຮົາ, ແລະເຮົາຈະເປັນພຣະເຈົ້າຂອງພວກເຂົາ ໃນຄວາມຈິງ ແລະດ້ວຍ
ຄວາມຊອບທັມ!
[9]ພຣະຢາເວຈອມໂຍທາຊົງກ່າວວ່າ: ບັດນີ້ພວກເຈົ້າຜູ້ທີ່ຍັງຄົງຟັງຖ້ອຍຄຳທັງຫລາຍເດີມໆ ທີ່ມາຈາກປາກຂອງຜູ້ປະກາດພຣະຄັມທັງຫລາຍ.
ເມື່ອຮາກຖານຂອງພຣະວິຫານຂອງພຣະຢາເວຈອມໂຍທາໄດ້ຖືກວາງແລ້ວ, ນີ້ຄືພຣະວິຫານຂອງພວກເຮົາ, ພຣະຢາເວຈອມໂຍທາຊົງກ່າວວ່າ:
ຈົ່ງເຮັດໃຫ້ມືຂອງເຈົ້າແຂງແຮງ ດັ່ງນັ້ນພຣະວິຫານ ຈຶ່ງຈະສາມາດສ້າງຂຶ້ນໄດ້.[10]ເພາະວ່າກ່ອນວັນເຫລົ່ານັ້ນ, ບໍ່ມີໃຜລວບລວມເມັດພືດໄດ້,
ບໍ່ມີໃຜໄດ້ກຳໄລບໍ່ວ່າຈະເປັນຄົນຫລືສັດ, ບໍ່ມີສັນຕິພາບຈາກສັດຕຣູສຳລັບຜູ້ທີ່ກຳລັງຈະໄປ ຫລືກຳລັງຈະມາ.
ເຮົາໄດ້ໃຫ້ພວກເຂົາທຸກຄົນຕໍ່ສູ້ຊຶ່ງກັນແລະກັນ ກັບເພື່ອນບ້ານຂອງຕົນ.
[11]ແຕ່ບັດນີ້ມັນຈະບໍ່ຄືກັບອະດີດ, ເຮົາຈະຢູ່ກັບປະຊາຊົນທີ່ເຫລືອຢູ່—ນີ້ຄືຄຳປະກາດຂອງພຣະຢາເວຈອມໂຍທາ.[12]“
ເພາະວ່າເມັດພືດພັນແຫ່ງສັນຕິພາບຈະຖືກຫວ່ານ; ເຄືອອະງຸ່ນຈະມີຫມາກ ແລະ ແຜ່ນດິນຈະເກີດຜົນຜະລິດ ແລະບັນດາທ້ອງຟ້າຈະໃຫ້ນ້ຳ-
ຫມອກຕົກ, ເພາະເຮົາຈະເຮັດໃຫ້ປະຊາຊົນທີ່ເຫລືອຢູ່ນີ້ໄດ້ຮັບສືບທອດສິ່ງເຫລົ່ານີ້ທັງຫມົດ, ເຊື້ອຊາດຂອງຢູດາ ແລະ ເຊື້ອຊາດຂອງເຢຣູຊາ-
ເລັມເອີຍ.
[13]ພວກເຈົ້າຈະເປັນຕົວຢ່າງສຳລັບບັນດາປະຊາຊາດແຫ່ງຄຳສາບແຊ່ງ, ໂອ ຄອບຄົວຢູດາ ແລະຄອບຄົວເຊື້ອສາຍອິດສະຣາເອນເອີຍ. ດັ່ງນັ້ນ
ເຮົາຈະຊ່ວຍເຫລືອພວກເຈົ້າ ແລະ ພວກເຈົ້າຈະໄດ້ເປັນແຫລ່ງແຫ່ງພຣະພອນ. ຈົ່ງຢ່າຢ້ານເລີຍ; ຈົ່ງເຮັດໃຫ້ມືຂອງພວກເຈົ້າເຂັ້ມແຂງຂຶ້ນ.
[14]ເພາະພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ດັ່ງທີ່ເຮົາໄດ້ວາງແຜນ ເພື່ອຈະເຮັດອັນຕະລາຍແກ່ພວກເຈົ້າ ເມື່ອບັນພະບຸຣຸດຂອງພວກເຈົ້າ
ຍົວະໃຫ້ໂມໂຫຮ້າຍ—ພຣະຢາເວຈອມໂຍທາຊົງກ່າວ—ແລະບໍ່ໄດ້ຜ່ອນຜັນໃຫ້,[15]ດັ່ງນັ້ນ ເຮົາໄດ້ວາງແຜນທີ່ຈະເຮັດອີກຄັ້ງ ແກ່ນະຄອນເຢ-
ຣູຊາເລັມ ແລະແກ່ເຊື້ອສາຍຢູດາເຫລົ່ານີ້ດ້ວຍ! ຢ່າຢ້ານເລີຍ!
[16]ສິ່ງເຫລົ່ານີ້ຄື ສິ່ງທີ່ພວກເຈົ້າຕ້ອງເຮັດ: ທຸກຄົນຈົ່ງເວົ້າແຕ່ຄວາມຈິງກັບເພື່ອນບ້ານທຸກຄົນຂອງເຂົາ. ຈົ່ງຕັດສິນຕາມຄວາມຈິງ, ຄວາມຍຸດຕິທັມ
ແລະສ້າງສັນຕິພາບຢູ່ທີ່ປະຕູເມືອງທັງຫລາຍຂອງຂອງພວກເຈົ້າ.[17]ຈົ່ງຢ່າວາງແຜນຊົ່ວຮ້າຍໃນໃຈຂອງພວກເຈົ້າຕໍ່ສູ້ຊຶ່ງກັນແລະກັນ, ແລະຈົ່ງຢ່າ
ຮັກຄຳປະຕິຍານບໍ່ຈິງ—ເພາະເຮົາກຽດຊັງສິ່ງເຫລົ່ານີ້!—ນີ້ເປັນຄຳປະກາດຂອງພຣະຢາເວ.”
[18]ຈາກນັ້ນ ຖ້ອຍຄຳຂອງພຣະຢາເວຈອມໂຍທາໄດ້ມາເຖິງຂ້ານ້ອຍ, ກ່າວວ່າ,[19]“ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້: ການອົດອາຫານໃນເດືອນ
ທີສີ່, ເດືອນທີຫ້າ, ເດືອນທີເຈັດ ແລະເດືອນທີສິບ ຈະເປັນເວລາແຫ່ງຄວາມຊົມຊື່ນຄວາມຍິນດີ ແລະເທດສະການຄວາມສຸກສຳລັບເຊື້ອສາຍຢູ-
ດາ! ເຫດສະນັ້ນຈົ່ງຮັກຄວາມຈິງ ແລະສັນຕິພາບ!
[20]ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້: ປະຊາຊົນຈະມາອີກຄັ້ງ, ແມ້ວ່າຄົນເຫລົ່ານັ້ນຈະອາໄສຢູ່ໃນເມືອງຕ່າງໆ.
[21]ຄົນທັງຫລາຍຂອງເມືອງຫນຶ່ງຈະໄປຫາອີກເມືອງຫນຶ່ງແລະເວົ້າວ່າ, "ໃຫ້ເຮົາຮີບໄປ ເພື່ອອ້ອນວອນຕໍ່ພຣະພັກຂອງພຣະຢາເວ ແລະເພື່ອສະ-
ແຫວງຫາພຣະຢາເວຈອມໂຍທາ! ພວກເຮົາເອງກໍກຳລັງຈະໄປດ້ວຍ.[22]ປະຊາຊົນຫລວງຫລາຍແລະບັນດາປະຊາຊາດທີ່ເຂັ້ມແຂງຈະມາສະ-
ແຫວງຫາພຣະຢາເວຈອມໂຍທາໃນນະຄອນເຢຣູຊາເລັມ ແລະ ຮ້ອງທູນຂໍພຣະເມດຕາຂອງພຣະຢາເວ!
[23]ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ວ່າ: ໃນວັນເຫລົ່ານັ້ນ ຜູ້ຊາຍສິບຄົນຈາກທຸກຊາດ, ທຸກພາສາ ຈະຈັບປາຍເສື້ອຄຸມຂອງພວກເຈົ້າ
ແລະກ່າວວ່າ, ‘ໃຫ້ເຮົາໄປນຳເຈົ້າ, ເພື່ອທີ່ພວກເຮົາຈະໄດ້ຍິນຄຳວ່າ ພຣະເຈົ້າສະຖິດຢູ່ກັບພວກທ່ານ!’”

 generated on Tue Jun 17 19:01:42 2025

9 [1]ນີ້ເປັນຄຳປະກາດຖ້ອຍຄຳຂອງພຣະຢາເວກ່ຽວກັບ ແຜ່ນດິນຮັດຣັກ ແລະເມືອງດາມາເຊ. ເພາະພຣະເນດຂອງພຣະຢາເວແກ່ມະນຸດຊາດ
ແລະເຜົ່າພັນຂອງອິດສະຣາເອນທັງໝົດດ້ວຍ.[2]ນີ້ເປັນຄຳປະກາດກ່ຽວກັບຮຳມາດ, ຊຶ່ງມີເຂດແດນຕິດກັນກັບດາມັສກັດ,
ແລະກ່ຽວກັບເມືອງຕີເຣແລະຊີໂດນ, ເຖິງວ່າພວກເຂົາຈະສະຫລາດຫລາຍກໍຕາມ.

[3]ເມືອງຕີເຣໄດ້ສ້າງກຳແພງເມືອງທີ່ແຂງແຮງສຳລັບຕົນເອງ ແລະສະສົມເງິນໄວ້ເປັນຈຳນວນຫລວງຫລາຍເຫມືອນຂີ້ຝຸ່ນ ແລະຄຳບໍຣິ-
ສຸດເຫມືອນກັບຂີ້ຕົມຕາມຖະຫນົນທັງຫລາຍ.[4]ລະວັງ ອົງພຣະຜູ້ເປັນເຈົ້າຈະຢຶດຊັບສິນຂອງນາງ ແລະທຳລາຍຄວາມເຂັ້ມແຂງຂອງນາງລົງໄປ
ໃນນ້ຳທະເລ, ດັ່ງນັ້ນເມືອງນີ້ຈະຖືກເຜົາໄຫມ້ດ້ວຍໄຟ.
[5]ເມືອງອາຊະກາໂລນຈະເຫັນ ແລະມີຄວາມຢ້ານ! ເມືອງຄາຊາຈະສັ່ນສະທ້ານຢ່າງຍິ່ງໃຫຍ່, ແລະຄວາມຫວັງຂອງນາງກໍຈະຖືກທຳລາຍ! ກະ-
ສັດຈາກເມືອງຄາຊາ ຈະພິນາດລົງ, ແລະເມືອງອາຊະກາໂລນຈະບໍ່ມີຄົນອາໄສຢູ່.[6]ຄົນແປກຫນ້າຈະໃຊ້ເມືອງອາຊະໂດດ,
ເປັນບ້ານຂອງພວກເຂົາ ແລະເຮົາຈະກຳຈັດຄວາມຈອງຫອງຂອງຄົນຟີລິດສະຕິນ.[7]ເພາະເຮົາຈະກຳຈັດເລືອດຂອງພວກເຂົາອອກມາຈາກ
ປາກທັງຫລາຍຂອງພວກເຂົາ ແລະເອົາຄວາມກຽດຊັງອອກໄປຈາກຫວ່າງແຂ້ວຂອງພວກເຂົາ. ຈາກນັ້ນພວກເຂົາຈະກາຍເປັນຜູ້ທີ່ຈະເຫລືອ
ຢູ່ນັ້ນສຳລັບພຣະເຈົ້າຂອງພວກເຮົາ ຄືຕະກຸນຫນຶ່ງໃນຢູດາ, ແລະ ເອັກໂຣນຈະກາຍເປັນເຫມືອນກັບຄົນເຢບຸດ.
[8]ເຮົາຈະຕັ້ງຄ້າຍຢູ່ຂ້າງແຜ່ນດິນຂອງເຮົາຕໍ່ສູ້ກອງທັບຂອງສັດຕຣູ ດັ່ງນັ້ນຈຶ່ງບໍ່ມີໃຜສາມາດຜ່ານເຂົ້າໄປ ຫລື ກັບອອກມາ, ເພາະະບໍ່ໃຫ້ຜູ້ໃດ
ມາກົດຂີ່ຂົ່ມເຫັງພວກເຂົາໄດ້ອີກຕໍ່ໄປ. ເພາະບັດນີ້ເຮົາເບິ່ງແຍງດິນແດນຂອງເຮົາດ້ວຍຕາຂອງເຮົາເອງ!
[9]ຈົ່ງຮ້ອງດ້ວຍຄວາມຊື່ນຊົມຍິນດີຢ່າງຍິ່ງ! ລູກສາວແຫ່ງຊີໂອນເອີຍ! ຈົ່ງໂຮ່ຮ້ອງດ້ວຍຄວາມຊື່ນຊົມຍິນດີ ລູກສາວແຫ່ງເຢຣູຊາເລັມເອີຍ! ເບິ່ງ
ແມ! ກະສັດຂອງເຈົ້າກຳລັງສະເດັດມາຫາພວກເຈົ້າດ້ວຍຄວາມຍຸດຕິທັມ ແລະກຳລັງຈະຊ່ວຍພວກເຈົ້າ. ພຣະອົງຊົງຖ່ອມໃຈ
ແລະຊົງປະທັບເທິງຫລັງລາ, ເທິງຫລັງລູກລາໂຕຫນຶ່ງ.[10]ຈາກນັ້ນ ເຮົາຈະທຳລາຍລົດມ້າຮົບທີ່ມາຈາກເອຟຣາຢິມ ແລະມ້າອອກຈາກນະຄອນເຢ-
ຣູຊາເລັມ, ແລະທະນູຖືກກຳຈັດອອກຈາກການສູ້ຮົບສົງຄາມ; ເພາະພຣະອົງຈະປະກາດສັນຕິສຸກແກ່ບັນດາປະຊາຊາດ, ແລະການປົກຄອງ
ຂອງພຣະອົງ ຈະເລີ່ມຈາກທະເລນີ້ໄປເຖິງທະເລນັ້ນ, ແລະຈາກແມ່ນ້ຳນັ້ນໄປເຖິງສຸດປາຍແຜ່ນດິນໂລກ.
[11]ສຳລັບພວກເຈົ້າ, ດ້ວຍວ່າເລືອດແຫ່ງຄຳຫມັ້ນສັນຍາຂອງເຮົາກັບພວກເຈົ້າ, ເຮົາຈະປົດປ່ອຍພວກນັກໂທດໃຫ້ເປັນອິດສະຫລະຈາກບໍ່ນ້ຳທີ່ບໍ່ມີ
ນ້ຳ.[12]ຈົ່ງກັບໄປກຳແພງເມືອງທີ່ເຂັ້ມແຂງ, ຊະເລີຍເສິກທັງຫລາຍເອີຍ! ແມ້ນແຕ່ໃນວັນນີ້ເຮົາກຳລັງປະກາດວ່າ, ເຮົາ
ຈະຊົດໃຊ້ເປັນສອງເທົ່າແກ່ພວກເຈົ້າ,[13]ເພາະເຮົາໄດ້ໂກ່ງຢູດາ ເຫມືອນກັບຄັນທະນູຂອງເຮົາ, ເຮົາໄດ້ໃສ່ຄວາມສັນຂອງເຮົາດ້ວຍເອຟຣາຢິມ.
ເຮົາໄດ້ປຸກລູກຊາຍທັງຫລາຍຂອງພວກເຈົ້າ, ຄືຊີໂອນ, ຕໍ່ສູ້ກັບລູກຊາຍທັງຫລາຍ, ຄື ກຣີກ, ແລະເຮັດໃຫ້ພວກເຈົ້າຄືຊີໂອນ, ເປັນຄືດາບ
ນັກຮົບ!
[14]ພຣະຢາເວຈະປະກົດແກ່ພວກເຂົາ ແລະລູກທະນູຂອງພຣະອົງຈະຖືກຍິງອອກໄປເຫມືອນດັ່ງຟ້າແມບ! ເພາະ-
ພຣະອົງພຣະຢາເວຂອງຂ້ານ້ອຍຈະເປົ່າແກ ແລະ ຊົງໄປຂ້າງຫນ້າດ້ວຍພາຍຸຈາກເທມານ.[15]ພຣະຢາເວຈອມໂຍທາຈະປົກປ້ອງຮັກສາພວກເຂົາ
ໄວ້, ແລະພວກເຂົາທັງຫລາຍຈະເຜົາໄຫມ້ພວກເຂົາເຈົ້າ ແລະ ເອົາຊະນະພວກກ້ອນຫີນຂອງສະຫລິງທັງຫມົດ. ຈາກນັ້ນ ພວກເຂົາຈະດື່ມແລະ
ໂຫ່ຮ້ອງເຫມືອນຄົນເມົາຫລົ້າອະງຸ່ນ, ແລະພວກເຂົາຈະຖືກເຕີມຄືຈອກເຫລົ້າອະງຸ່ນທັງຫລາຍ, ຄືກັບມຸມແຈທັງຫລາຍຂອງແທ່ນບູຊາ.
[16]ດັ່ງນັ້ນພຣະຢາເວພຣະເຈົ້າຂອງພວກເຂົາຈະຊ່ວຍພວກເຂົາ ໃນວັນນັ້ນ; ພວກເຂົາຈະເປັນປະຊາຊົນຂອງພຣະອົງເຫມືອນຝູງສັດ. ພວກເຂົາ
ຈະເປັນເຫມືອນດັ່ງແກ້ວເພັດ ຊຶ່ງຕິດຢູ່ໃນມົງກຸດທີ່ສ່ອງແສງໃນແຜ່ນດິນຂອງພຣະອົງ.[17]ພວກເຂົາຊ່າງດີ ແລະ ງົດງາມ! ຊາຍຫນຸ່ມທັງຫລາຍ
ຈະເລີນເຕີບໃຫຍ່ງອກງາມດ້ວຍເມັດເຂົ້າ ແລະ ຍິງສາວຈະເລີນງອກງາມດ້ວຍນ້ຳເຫລົ້າອະງຸ່ນ.

 generated on Tue Jun 17 19:01:42 2025

10 [1]ຈົ່ງທູນຂໍຝົນຈາກພຣະຢາເວໃນຍາມຝົນທ້າຍລະດູ—ພຣະຢາເວເຮັດໃຫ້ເກີດພາຍຸຝົນຄະນອງ—ແລະພຣະອົງຈະປະທານຫ່າຝົນໃຫ້ແກ່
ທຸກຄົນ ແລະພືດຜັກໃນທົ່ງນາ. [2]ສຳລັບຮູບເຄົາລົບປະຈຳເຮືອນທັງຫລາຍທີ່ເວົ້າບໍ່ຈິງ; ພວກຫມໍດູທີ່ເຫັນນິມິດບໍ່ຈິງ; ໄດ້ເລົ່າຄວາມຝັນບໍ່ຈິງ,
ແລະໃຫ້ຄຳເລົ້າໂລມໃຈອັນປະໂຫຍດ, ເພາະສະນັ້ນ ພວກເຂົາໄດ້ປົບຫນີຄືກັບຝູງແກະທີ່ບໍ່ມີຈຸດຫມາຍປາຍທາງ ແລະທຸກຍາກລຳບາກເພາະບໍ່-
ມີຜູ້ລ້ຽງ.

[3]ຄວາມໂມໂຫຮ້າຍຂອງເຮົາເຜົາໄຫມ້ພວກຜູ້ລ້ຽງແກະ; ມັນເປັນແກະຕົວຜູ້ຄື—ພວກຜູ້ນຳ—ທີ່ເຮົາຈະລົງໂທດ. ພຣະຢາເວຈອມໂຍທາຈະຢູ່ກັບ
ຝູງແກະຂອງພຣະອົງ, ຄືເຊື້ອສາຍຢູດາ, ແລະເຮັດໃຫ້ພວກເຂົາ ເປັນເຫມືອນມ້າຮົບຂອງພຣະອົງໃນສົງຄາມ!
[4]ແຈຫີນເສົາເອກມາຈາກເຂົາ; ເຫລັກຕອກເຕັນຈະມາຈາກເຂົາ; ຄັນທະນູສູ້ຮົບມາຈາກເຂົາ; ແລະບັນດາຜູ້ປົກຄອງຈະມາຮ່ວມໂຕກັນ.
[5]ພວກເຂົາຈະເປັນເຫມືອນນັກຮົບທັງຫລາຍ ຜູ້ຊຶ່ງຢຽບຢ່ຳສັດຕຣູທັງຫລາຍຂອງພວກເຂົາໃນຂີ້ຕົມຕາມຖະຫນົນ; ໃນສົງຄາມ ພວກເຂົາຈະສູ້-
ຮົບ, ເພາະພຣະຢາເວສະຖິດຢູ່ກັບຄົນເຫລົ່ານັ້ນ, ແລະຄົນທີ່ຂີ່ມ້າຮົບທັງຫລາຍຈະອັບອາຍ.
[6]ເຮົາຈະເສີມກຳລັງເຊື້ອສາຍຢູດາ ແລະປົກປ້ອງເຊື້ອສາຍຂອງໂຢເຊັບ; ເພາະເຮົາຈະເຮັດໃຫ້ພວກເຂົາຄືນມາສູ່ສະພາບເດີມ ແລະ
ເມດຕາພວກເຂົາ. ເຖິງແມ້ວ່າ ພວກເຂົາຈະເປັນເຊັ່ນນັ້ນ ເຮົາກໍບໍ່ໄດ້ຖິ້ມພວກເຂົາອອກໄປ, ເພາະເຮົາຄືພຣະຢາເວ ພຣະເຈົ້າຂອງພວກເຂົາ,
ເຮົາຈະຟັງຄຳອ້ອນວອນຂອງພວກເຂົາ. [7]ແລ້ວເອຟຣາຢິມຈະເປັນເໝືອນຊາຍຫນຸ່ມຜູ້ຫນຶ່ງ, ແລະຈິດໃຈຂອງພວກເຂົາທັງຫລາຍຈະຊົມຊື່ນຍິນ-
ດີເໝືອນໄດ້ດື່ມເຫລົ້າອະງຸ່ນ; ພວກລູກຫລານຂອງພວກເຂົາຈະໄດ້ເຫັນ ແລະຊົມຊື່ນຍິນດີ. ຈິດໃຈຂອງພວກເຂົາຈະຍິນ-
ດີຢ່າງລົ້ນເຫລືອໃນເຮົາ!
[8]ເຮົາຈະຜິວປາກເອີ້ນພວກເຂົາ ແລະຮວບຮວມພວກເຂົາໄວ້, ເພາະວ່າ ເຮົາຈະຊ່ວຍພວກເຂົາ ແລະ
ພວກເຂົາຈະກາຍເປັນຍິ່ງໃຫ່ຍເຫມືອນທີ່ພວກເຂົາເຄີຍເປັນມາກ່ອນ! [9]ເຮົາໄດ້ຫວ່ານພວກເຂົາໄປທ່າມກາງປະຊາຊົນທັງຫລາຍ, ແຕ່ພວກເຂົາ
ຈະລະນຶກເຖິງເຮົາໃນບັນດາປະເທດທີ່ຫ່າງໄກທັງຫລາຍນັ້ນ, ດັ່ງນັ້ນ ພວກເຂົາ ແລະ ລູກຫລານທັງຫລາຍຂອງພວກເຂົາ ຈະດຳລົງຊີວິດຢູ່ ແລະ
ກັບຄືນມາ. [10]ເພາະເຮົາຈະເຮັດໃຫ້ພວກເຂົາກັບມາສູ່ສະພາບເດີມຈາກແຜ່ນດິນເອຢິບ ແລະ ຮວບຮວມພວກເຂົາມາຈາກປະເທດອັດຊີເຣຍ.
ເຮົາຈະນຳພວກເຂົາມາເຖິງແຜ່ນດິນກີເລອາດ ແລະພູເລບານອນ ຈົນກວ່າບ່ອນນັ້ນຈະບໍ່ມີບ່ອນໃຫ້ພວກເຂົາ.
[11]ເຮົາຈະຂ້າມຜ່ານທະເລແຫ່ງຄວາມທຸກຍາກ; ເຮົາຈະໂຈມຕີຟອງນ້ຳທະເລນັ້ນ ແລະຈະເຮັດໃຫ້ບ່ອນເລິກທັງຫລາຍຂອງແມ່ນ້ຳນິນແຫ້ງລົງ.
ຄວາມສະຫງ່າງາມຂອງອັດຊີເຣຍຈະຕົກຕ່ຳ ແລະໄມ້ຄ້ອນເທົ້າຂອງອີຢິບຈະຖືກຖອດອອກໄປຈາກຊາວອີຢິບ. [12]ເຮົາຈະ
ເຮັດໃຫ້ພວກເຂົາເຂັ້ມແຂງດ້ວຍຕົວເຮົາເອງ, ແລະພວກເຂົາຈະດຳເນີນຊີວິດໃນນາມຂອງເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວ.


generated on Tue Jun 17 19:01:42 2025

11 [1]ພູເລບານອນເອີຍ, ຈົ່ງໄຂບັນດາປະຕູຂອງເຈົ້າ, ເພື່ອໄຟຈະໄດ້ເຜົາໄຫມ້ຕົ້ນແປກທັງຫລາຍຂອງເຈົ້າ![2]ຕົ້ນແປກເອີຍ, ຈົ່ງຮ້ອງໄຫ້ສາ,
ເພາະຕົ້ນສົນຈະລົ້ມລົງແລ້ວ! ສະຫງ່າຣາສີທີ່ຖືກທຳລາຍລົງງນັ້ນແມ່ນຫຍັງ! ໂອ ຕົ້ນໂອກແຫ່ງບາຊານເອີຍ, ຈົ່ງຮ້ອງໄຫ້ ເພາະປ່າ-
ທຶບໄດ້ລົ້ມລົງຫມົດແລ້ວ.[3]ພວກຜູ້ລ້ຽງແກະກໍຍົກສຽງຮ້ອງໄຫ້ຂຶ້ນ, ເພາະກຽດສັກສີຂອງພວກເຂົາກໍຖືກທຳລາຍໄປແລ້ວ!
ຝູງສິງຫນຸ່ມໃຫຍ່ກໍແຜດສຽງຮ້ອງ, ເພາະວ່າຄວາມຈອງຫອງຂອງແມ່ນ້ຳຢໍແດນຖືກທຳລາຍແລ້ວ!

[4]ນີ້ຄືສິ່ງທີ່ພຣະຢາເວພຣະເຈົ້າຂອງຂ້ານ້ອຍຊົງກ່າວວ່າ, “ເຫມືອນຄົນລ້ຽງຝູງແກະຄົນຫນຶ່ງ, ເຝົ້າເບິ່ງຝູງແກະຊຶ່ງໄດ້ຖືກກຳນົດຂ້າເປັນອາຫານ!
[5](ຄົນທັງຫລາຍຜູ້ຊື້ພວກມັນ ກໍຂ້າພວກມັນເປັນອາຫານ, ແລະບໍ່ຖືກລົງໂທດ, ແລະຄົນທັງຫລາຍທີ່ຂາຍພວກມັນເວົ້າວ່າ, ‘ສາທຸການແດ່ພຣະ-
ຢາເວ! ຂ້ານ້ອຍກາຍເປັນຄົນຮັ່ງມີແລ້ວ!’ ເພາະຜູ້ລ້ຽງແກະທັງຫລາຍເຮັດວຽກໃຫ້ເຈົ້າຂອງຝູງແກະ ບໍ່ມີຄວາມສົງສານຕໍ່ພວກມັນ.)
[6]ເພາະເຮົາບໍ່ໄດ້ສົງສານບັນດາຄົນທີ່ອາໄສໃນແຜ່ນດິນນັ້ນອີກຕໍ່ໄປ!—ນີ້ເປັນຄຳປະກາດຂອງພຣະຢາເວ. ເບິ່ງແມ! ເຮົາເອງທີ່ຈະເຮັດໃຫ້ພວກ-
ເຂົາທຸກຄົນຕົກຢູ່ໃນມືຂອງເພື່ອນບ້ານຂອງພວກເຂົາ ແລະ ໃນມືຂອງກະສັດຂອງພວກເຂົາ ແລະພວກເຂົາຈະທຳລາຍແຜ່ນດິນນັ້ນ ແລະເຮົາຈະ
ບໍ່ຊ່ວຍເຫລືອຈັກຄົນໃຫ້ພົ້ນຈາກມືຂອງພວກເຂົາເລີຍ.”
[7]ດັ່ງນັ້ນຂ້ານ້ອຍໄດ້ກາຍເປັນຜູ້ລ້ຽງຝູງແກະທີ່ຖືກກຳນົດໃຫ້ຂ້າເປັນອາຫານ, ເພາະຄົນເຫລົ່ານັ້ນຜູ້ຊຶ່ງໄດ້ຈັດການກັບຝູງແກະ. ຂ້ານ້ອຍໄດ້ເອົາ
ໄມ້ຄ້ອນເທົ້າສອງອັນ; ອັນຫນຶ່ງໃຫ້ຊື່ວ່າ "ພຣະຄຸນ." ອີກອັນຫນຶ່ງ ຂ້ານ້ອຍໃສ່ຊື່ວ່າ "ເອກະພາບ." ດ້ວຍວິທີນີ້ແຫລະ ຂ້ານ້ອຍໄດ້ລ້ຽງດູຝູງ
ແກະນັ້ນ.[8]ໃນເດືອນຫນຶ່ງ ຂ້ານ້ອຍໄດ້ທຳລາຍຜູ້ລ້ຽງແກະສາມຄົນ, ເພາະຂ້ານ້ອຍຫມົດຄວາມອົດທົນກັບພວກເຂົາ, ແລະພວກເຂົາກຽດຊັງ
ຂ້ານ້ອຍເຫມືອນກັນ.[9]ຈາກນັ້ນ ຂ້ານ້ອຍໄດ້ບອກຕໍ່ເຈົ້າຂອງທັງຫລາຍວ່າ, “ຂ້ານ້ອຍຈະບໍ່ເຮັດວຽກເປັນຄົນລ້ຽງແກະໃຫ້ທ່ານອີກຕໍ່ໄປ.
ແກະທີ່ກຳລັງຈະຕາຍ—ປ່ອຍໃຫ້ພວກມັນຕາຍເຖີ້ນ; ແກະນັ້ນກຳລັງຖືກທຳລາຍ—ປ່ອຍໃຫ້ມັນຖືກທຳລາຍເຖີ້ນ;
ໃຫ້ແກະນັ້ນທີ່ຍັງເຫລືອຢູ່ກິນເນື້ອຂອງພວກດຽວກັນເອງ.”
[10]ດັ່ງນັ້ນ ຂ້ານ້ອຍໄດ້ນຳເອົາໄມ້ຄ້ອນເທົ້າທີ່ເອີ້ນວ່າ "ພຣະຄຸນ" ນັ້ນມາອອກແລະຫັກມັນ
ເພື່ອຫັກພັນທະສັນຍາທີ່ຂ້ານ້ອຍໄດ້ເຮັດກັບເຜົ່າທັງຫມົດຂອງຂ້ານ້ອຍ.[11]ໃນວັນທີ່ພັນທະສັນຍາຖືກຍົກເລີກ ແລະ
ຄົນເຫລົ່ານັ້ນທີ່ຈັດການກັບຝູງແກະ ແລະຜູ້ຊຶ່ງກຳລັງເຝົ້າເບິ່ງຂ້ານ້ອຍ ຈະໄດ້ຮູ້ວ່າພຣະຢາເວໄດ້ຊົງກ່າວແລ້ວ.[12]ຂ້ານ້ອຍໄດ້ບອກພວກເຂົາວ່າ,
“ຖ້າເບິ່ງຄືວ່າມັນດີຕໍ່ພວກທ່ານ, ຈົ່ງຈ່າຍເງິນຄ່າຈ້າງຂອງຂ້ານ້ອຍມາ, ແຕ່ຖ້າບໍ່ແມ່ນ, ກໍບໍ່ຈ່າຍຄ່າຈ້າງໃຫ້ຂ້ານ້ອຍ.” ດັ່ງນັ້ນພວກເຂົາໄດ້
ຈ່າຍເງິນຄ່າຈ້າງໃຫ້ຂ້ານ້ອຍຈຳນວນເງິນ—ສາມສິບຫລຽນ.
[13]ຈາກນັ້ນພຣະຢາເວໄດ້ຊົງກ່າວກັບຂ້ານ້ອຍວ່າ, “ຈົ່ງສະສົມເງິນນັ້ນໄວ້ໃນຄັງ, ຄ່າຈ້າງທີ່ງົດງາມທີ່ພວກເຂົາປະເມີນຄ່າເຈົ້າ!" ດັ່ງນັ້ນ ຂ້າ-
ນ້ອຍຈຶ່ງໄດ້ເອົາເງິນສາມສິບຫລຽນ ແລະສະສົມມັນໄວ້ໃນຄັງໃນພຣະວິຫານຂອງພຣະຢາເວ.[14]ຈາກນັ້ນ ຂ້ານ້ອຍໄດ້ຫັກໄມ້ຄ້ອນເທົ້າອັນທີສອງ
ຂອງຂ້ານ້ອຍ, "ເອກະພາບ," ເພື່ອຕັດຄວາມເປັນພີ່ນ້ອງລະຫວ່າງຢູດາກັບອິດສະຣາເອນ.
[15]ພຣະຢາເວໄດ້ບອກຂ້ານ້ອຍວ່າ, “ອີກຄັ້ງຫນຶ່ງ, ຈົ່ງເອົາເຄື່ອງໃຊ້ຂອງຜູ້ລ້ຽງແກະໂງ່ຈ້າເພື່ອເຈົ້າເອງ,[16]ເບິ່ງແມ໋, ເຮົາຈະຕັ້ງຜູ້ລ້ຽງແກະຄົນຫນຶ່ງ
ໃນແຜ່ນດິນນີ້. ເຂົາຈະບໍ່ສົນໃຈຄວາມພິນາດຂອງແກະ. ເຂົາຈະບໍ່ສະແຫວງຫາແກະທີ່ກະຈັດກະຈາຍ, ຫລືຮັກສາແກະພິການ.
ເຂົາບໍ່ລ້ຽງແກະທີ່ແຂງແຮງ, ແຕ່ຈະກິນເນື້ອຂອງແກະໂຕອ້ວນພີ ແລະ ຈະຫັກກີບຕີນຂອງພວກມັນ.
[17]ວິບັດແກ່ຜູ້ລ້ຽງແກະທີ່ອັບປະໂຫຍດ ຜູ້ທີ່ປະຖິ້ມຝູງແກະນັ້ນ! ຂໍໃຫ້ດາບນັ້ນຕໍ່ສູ້ກັບແຂນຂອງເຂົາ ແລະ ຕາຂວາຂອງເຂົາ!
ຂໍໃຫ້ແຂນຂອງເຂົາຫ່ຽວແຫ້ງໄປ ແລະໃຫ້ຕາເບື້ອງຂວາຂອງເຂົາບອດໄປ!”

# 12

[1]ນີ້ຄືການປະກາດຖ້ອຍຄຳຂອງພຣະຢາເວກ່ຽວກັບອິດສະຣາເອນ—ຄຳປະກາດຂອງພຣະຢາເວ, ຜູ້ຊຶ່ງຊຶ່ງຄຶງທ້ອງຟ້າອອກ ແລະ ວາງຮາກ-
ຖານຂອງແຜ່ນດິນໂລກ, ຜູ້ຊຶ່ງໃສ່ຈິດວິນຍານຂອງປະຊາຊາດໄວ້ໃນມະນຸດ,[2]“ເບິ່ງແມ, ເຮົາຈະເຮັດໃຫ້ນະຄອນເຢຣູຊາເລັມເປັນຈອກແຫ່ງ
ຄວາມມຶນເມົາສຳລັບປະຊາຊົນທັງຫລາຍທີ່ຢູ່ອ້ອມຮອບໆ. ເພື່ອໃຫ້ພວກເຂົາຍ່າງໂຊເຊ ມັນຈະເປັນເຊັ່ນດຽວກັນສຳລັບຢູດາ ລະຫວ່າງການປິດ
ລ້ອມນະຄອນເຢຣູຊາເລັມ.[3]ໃນວັນນັ້ນ, ເຮົາຈະເຮັດໃຫ້ເຢຣູຊາເລັມເປັນຫີນຫນັກສຳລັບປະຊາຊົນທັງຫມົດ. ໃຜກໍຕາມທີ່ພະຍາຍາມຍົກຫີນ
ນັ້ນຂຶ້ນ ຈະເຮັດໃຫ້ຕົນເອງບາດເຈັບຢ່າງສາຫັດ, ແລະບັນດາປະຊາຊາດແຫ່ງແຜ່ນດິນໂລກ ຈະລວມຕົວກັນຕໍ່ສູ້ເມືອງນັ້ນ.

[4]ໃນວັນນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວ—ເຮົາຈະໂຈມຕີມ້າທຸກໂຕດ້ວຍຄວາມຢ້ານກົວ ແລະ ຜູ້ຂີ່ມ້າທຸກຄົນຢ່າງຄົນບ້າ. ເຮົາຈະເຝົ້າຕາ
ເບິ່ງເຊື້ອສາຍຢູດາ ແລະຈະໂຈມຕີມ້າທຸກໂຕຂອງສັດຕຣູຕາບອດໄປ.[5]ຈາກນັ້ນ ຜູ້ນຳທັງຫລາຍຂອງຢູດາຈະເວົ້າໃນໃຈຂອງພວກເຂົາທັງຫລາຍ
ວ່າ, ‘ຄົນທັງຫລາຍຜູ້ອາໄສຢູ່ນະຄອນເຢຣູຊາເລັມຄືກຳລັງຂອງພວກເຮົາ ເພາະວ່າພຣະຢາເວຈອມໂຍທາ, ຄືພຣະເຈົ້າຂອງພວກເຂົາ.’
[6]ໃນວັນນັ້ນ ເຮົາຈະເຮັດໃຫ້ຜູ້ນຳທັງຫລາຍຂອງຢູດາເປັນເຫມືອນຫມໍ້ໄຟທ່າມກາງໄມ້ ແລະ ເປັນເຫມືອນໂຄມໄຟທ່າມກາງຕົ້ນເຂົ້າທີ່ຢືນຢູ່,
ເພາະພວກເຂົາຈະກືນກິນປະຊາຊົນທັງຫລາຍທີ່ຢູ່ຮອບໆ ທາງດ້ານຂວາ ແລະ ທາງດ້ານຊ້າຍຂອງພວກເຂົາ. ນະຄອນເຢຣູຊາເລັມຈະ
ອາໄສຢູ່ໃນສະຖານທີ່ຂອງເຂົາເອງອີກຄັ້ງ.’
[7]ພຣະຢາເວຈະຮັກສາເຕັນຂອງຢູດາ ເພື່ອວ່າສະຫງ່າຣາສີຂອງເຊື້ອສາຍດາວິດ ແລະ ກຽດສັກສີເຫລົ່ານັ້ນ ຜູ້ອາໄສໃນນະຄອນເຢຣູຊາເລັມ
ຈະບໍ່ໄດ້ຍິ່ງໃຫ່ຍໄປກວ່າຄົນທີ່ເຫລືອຂອງຢູດາ.[8]ໃນວັນນັ້ນພຣະຢາເວຈະຊົງເປັນຜູ້ປົກປ້ອງຂອງຊາວເຢຣູຊາເລັມ, ແລະໃນວັນນັ້ນ ຄົນເຫລົ່ານັ້ນ
ທີ່ອ່ອນກຳລັງທ່າມກາງພວກເຂົາຈະເປັນເຫມືອນດາວິດ, ໃນຂະນະທີ່ເຊື້ອສາຍຂອງດາວິດ, ຈະເປັນເຫມືອນພຣະເຈົ້າ,
ເຫມືອນເທວະດາຂອງພຣະຢາເວຢູ່ຂ້າງຫນ້າພວກເຂົາ.[9]"ໃນວັນນັ້ນ ທີ່ເຮົາຈະເລີ່ມຕົ້ນທຳລາຍບັນດາປະຊາຊາດທັງຫມົດ ທີ່ມາຕໍ່ສູ້ນະຄອນເຢ-
ຣູຊາເລັມ.
[10]ແຕ່ວ່າ ເຮົາຈະຖອກເທພຣະວິນຍານແຫ່ງຄວາມສົງສານ ແລະ ຄຳອ້ອນວອນເທິງເຊື້ອສາຍດາວິດ ແລະ ຄົນທັງຫລາຍທີ່ອາໄສຢູ່ເຢຣູຊາເລັມ,
ດັ່ງນັ້ນ ພວກເຂົາຈະເຫັນເຮົາ, ຜູ້ດຽວທີ່ພວກເຂົາໄດ້ແທງຜ່ານ. ພວກເຂົາຈະໂສກເສົ້າເສຍໃຈເພື່ອເຮົາ, ເຫມືອນຜູ້ທີ່ໂສກເສົ້າເສຍໃຈໃຫ້ແກ່
ລູກຊາຍຄົນດຽວຂອງຕົນ; ພວກເຂົາຈະໄວ້ທຸກໂສກເສົ້າເສຍໃຈຢ່າງຂົມຂື່ນ ສຳລັບພວກເຂົາເຫມືອນຄົນເຫລົ່ານັ້ນ
ຜູ້ທີ່ໂສກເສົ້າເສຍໃຈເຖິງການຕາຍຂອງລູກຊາຍກົກຂອງຕົນ.[11]ໃນວັນນັ້ນ ຜູ້ໂສກເສົ້າເສຍໃຈໃນເຢຣູຊາເລັມຈະເປັນເຫມືອນ
ຜູ້ໂສກເສົ້າເສຍໃຈທີ່ຮາດັດ ຣິມໂມນ ທີ່ທົ່ງພຽງເມກິດໂດ.
[12]ແຜ່ນດິນຈະໂສກເສົ້າເສຍໃຈ, ແຕ່ລະຕະກູນແຍກອອກຈາກຕະກູນຕ່າງໆ. ຕະກູນຂອງເຊື້ອສາຍເດວິດຈະຖືກແຍກ ແລະບັນດາເມຍ
ຂອງພວກເຂົາ ຈະຖືກແຍກອອກຈາກຜູ້ຊາຍທັງຫລາຍ. ຕະກູນຂອງເຊື້ອສາຍນາທານຈະຖືກແຍກອອກ
ແລະບັນດາເມຍທັງຫລາຍຂອງພວກເຂົາ ຈະຖືກແຍກອອກຈາກຜູ້ຊາຍທັງຫລາຍ.[13]ຕະກູນຂອງເຊື້ອຍສາຍເລວີຈະຖືກແຍກ ແລະ ບັນດາເມຍ
ຂອງພວກເຂົາ ຈະຖືກແຍກອອກຈາກຜູ້ຊາຍທັງຫລາຍ. ຕະກູນຂອງເຊື້ອສາຍຊິເມອີຈະຖືກແຍກ ແລະບັນດາເມຍຂອງພວກເຂົາ
ຈະຖືກແຍກອອກຈາກຜູ້ຊາຍທັງຫລາຍ.[14]ທຸກຕະກູນຂອງຕະກູນຕ່າງໆ ທີ່ເຫລືອຢູ່—ແຕ່ລະຕະກູນຈະຖືກແຍກ ແລະບັນດາເມຍຂອງພວກເຂົາ
ຈະຖືກແຍກອອກຈາກຜູ້ຊາຍທັງຫລາຍ.”

 generated on Tue Jun 17 19:01:42 2025

13 [1]“ໃນວັນນັ້ນນ້ຳພຸຈະພຸ່ງຂຶ້ນສຳລັບຄອບຄົວຂອງດາວິດ ແລະຊາວເຢຣູຊາເລັມ, ເພາະຄວາມບາບ ແລະ ຄວາມບໍ່ຣິສຸດຂອງພວກເຂົາ.
[2]ໃນວັນນັ້ນ—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ—ເຮົາຈະຕັດຊື່ທັງຫລາຍຂອງບັນດາຮູບເຄົາລົບໃຫ້ຫນີຈາກແຜ່ນດິນ
ແລະຈະບໍ່ມີໃຜລະນຶກເຖິງພວກມັນອີກເລີຍ. ເຮົາຈະເຮັດໃຫ້ບັນດາຜູ້ປະກາດພຣະທັມບໍ່ຈິງ ແລະ ວິນຍານທີ່ຊົ່ວຮ້າຍທີ່ເປັນມົນທິນອອກໄປຈາກ
ແຜ່ນດິນນັ້ນ.

[3]ຖ້າມີໃຜຍັງທຳນວາຍຢູ່, ພໍ່ແມ່ຜູ້ໃຫ້ກຳເນີດເຂົາຈະບອກເຂົາວ່າ, ‘ເຈົ້າຈະບໍ່ມີຊີວິດຢູ່ ເພາະເຈົ້າເວົ້າຂີ້ຕົວະໃນພຣະນາມຂອງພຣະຢາເວ!’
ຈາກນັ້ນພໍ່ແມ່ຜູ້ໃຫ້ກຳເນີດເຂົາຈະແທງເຂົາໃຫ້ຊອດເມື່ອເຂົາທຳນວາຍ.
[4]ໃນວັນນັ້ນຜູ້ທຳນວາຍແຕ່ລະຄົນຈະອັບອາຍ ເພາະນິມິດຂອງເຂົາເອງ ເມື່ອພວກເຂົາທຳນວາຍ. ພວກເຂົາເຫລົ່ານັ້ນຈະບໍ່ນຸ່ງເສື້ອທີ່ເປັນຂົນສັດ
ເພື່ອທີ່ຫລອກຫລວງປະຊາຊົນຕໍ່ໄປ.[5]ເພາະແຕ່ລະຄົນຈະເວົ້າວ່າ, ‘ຂ້າພະເຈົ້າບໍ່ແມ່ນຜູ້ທຳນວາຍ! ຂ້ານ້ອຍເປັນຊາວນາ,
ເພາະແຜ່ນດິນກາຍເປັນງານຂອງຂ້ານ້ອຍຕັ້ງແຕ່ຂ້ານ້ອຍຍັງເປັນຫນຸ່ມ!'[6]ແຕ່ບາງຄົນຈະເວົ້າກັບເຂົາວ່າ,
‘ບາດແຜເຫລົ່ານີ້ທີ່ແຂນຂອງທ່ານແມ່ນຫຍັງ?' ແລະເຂົາຈະຕອບວ່າ, ‘ຂ້ານ້ອຍໄດ້ຮັບບາດເຈັບກັບຄົນເຫລົ່ານັ້ນໃນເຮືອນເພື່ອນຂອງຂ້າ-
ນ້ອຍ.’”
[7]“ດາບເອີຍ! ເຈົ້າຈົ່ງລຸກຂຶ້ນຕໍ່ສູ້ພວກຜູ້ລ້ຽງແກະຂອງເຮົາ ຄືຜູ້ຊາຍຄົນນັ້ນທີ່ຢືນໃກ້ເຮົາ—ນີ້ເປັນຄຳປະກາດຂອງພຣະຢາເວຈອມໂຍທາ.
ຈົ່ງໂຈມຕີຜູ້ລ້ຽງແກະ ແລະ ຝູງແກະນັ້ນຈະກະຈັດກະຈາຍໄປ! ເຮົາຈະກຳມືຂອງເຮົາຕໍ່ສູ້ຄົນຕ່ຳຕ້ອຍທັງຫລາຍ.
[8]ແລ້ວສິ່ງນີ້ຈະໄດ້ເກີດຂຶ້ນທົ່ວແຜ່ນດິນ—ນີ້ເປັນຄຳປະກາດຂອງພຣະຢາເວ—ສອງໃນສາມຂອງມັນຈະຖືກຕັດອອກ!
ຄົນເຫລົ່ານັ້ນຈະຖືກທຳລາຍຈິບຫາຍ; ພຽງຫນຶ່ງໃນສາມເທົ່ານັ້ນທີ່ຈະຍັງເຫລືອຢູ່.[9]ເຮົາຈະເອົາຫນຶ່ງໃນສາມນີ້ຜ່ານໄຟ ແລະ
ເຮັດໃຫ້ພວກເຂົາບໍ່ຣິສຸດເຫມືອນເງິນທີ່ຖືກຫລອມ; ຄືເຮົາຈະທົດສອບພວກເຂົາເຫມືອນທົດສອບຄຳ. ພວກເຂົາຈະຮ້ອງຊື່ຂອງເຮົາ
ແລະເຮົາຈະຕອບພວກເຂົາ ແລະ ເວົ້າວ່າ, ‘ນີ້ເປັນປະຊາຊາດຂອງເຮົາ’ ແລະພວກເຂົາຈະກ່າວວ່າ, ‘ພຣະຢາເວເປັນພຣະເຈົ້າຂອງຂ້ານ້ອຍ!’”


generated on Tue Jun 17 19:01:42 2025

## 14

1ເບິ່ງແມ! ວັນຂອງພຣະຢາເວກຳລັງມາ ເມື່ອສິ່ງຂອງທີ່ພວກເຈົ້າປຸ້ນມາຈະຖືກແບ່ງກັນໃນທ່າມກາງພວກເຈົ້າ. 2ແລະເມືອງນັ້ນຈະຖືກຢຶດຄອງ.
ບ້ານເຮືອນທັງຫລາຍຈະຖືກປຸ້ນເອົາຊັບ ແລະ ບັນດາຜູ້ຍິງຈະຖືກຂົ່ມຂືນ. ພົນລະເມືອງເຄິ່ງຫນຶ່ງຈະຖືກຈັບໄປເປັນຊະເລີຍ, ແຕ່ປະຊາຊົນຜູ້ທີ່
ເຫລືອຢູ່ຈະບໍ່ຖືກຕັດອອກໄປຈາກເມືອງນັ້ນ.

3ແຕ່ພຣະຢາເວຈະສະເດັດອອກໄປ ແລະເຮັດສົງຄາມຕໍ່ສູ້ກັບປະຊາຊາດເຫລົ່ານັ້ນ ເຫມືອນມື້ທີ່ພຣະອົງຕໍ່ສູ້ໃນວັນແຫ່ງສົງຄາມ. 4ໃນມື້ນັ້ນພຣະ-
ບາດຂອງພຣະອົງຈະຢືນຢູ່ທີ່ພູຫມາກກອກເທດ, ຊຶ່ງຢູ່ຂ້າງນະຄອນເຢຣູຊາເລັມທາງທິດຕາເວັນອອກ ແລະ ພູຫມາກກອກເທດນັ້ນຈະຖືກແບ່ງ
ເຄິ່ງລະຫວ່າງທິດຕາເວັນອອກ ແລະ ທິດຕາເວັນຕົກ, ໂດຍຮ່ອມພູທີ່ກວ້າງໃຫຍ່ ແລະ ເຄິ່ງຫນຶ່ງຂອງພູຈະກັບໄປດ້ານທິດເໜືອ ແລະ ເຄິ່ງ
ຫນຶ່ງໄປທາງທິດໃຕ້.
5ຈາກນັ້ນພວກເຈົ້າທັງຫລາຍຈະຫນີລົງໄປໃນຮ່ອມພູຂອງພຣະຢາເວ, ເພາະວ່າຮ່ອມພູລະຫວ່າງພູເຂົາເຫລົ່ານັ້ນຈະຍາວໄປເຖິງອາເຊນ.
ພວກເຈົ້າຈະຫລົບຫນີໄປ ເຫມືອນກັບພວກເຈົ້າໄດ້ປົບຫນີຈາກແຜ່ນດິນໄຫວໃນສະໄຫມອຸດຊີຢາ ກະສັດແຫ່ງຢູດາ. ແລ້ວພຣະຢາເວາພຣະ-
ເຈົ້າຂອງຂ້ານ້ອຍ ຈະສະເດັດມາພ້ອມກັບອົງຜູ້ບໍຣິສຸດທັງຫມົດ.
6ໃນວັນນັ້ນ ຈະບໍ່ມີແສງສະຫວ່າງ, ແຕ່ບໍ່ຫນາວ ຫລື ມີຫມາກເຫັບເຫມືອນກັນ. 7ໃນວັນນັ້ນ, ມີພຽງພຣະຢາເວເທົ່ານັ້ນທີ່ຮູ້ຈັກ, ເພາະຈະບໍ່ແມ່ນ
ກາງເວັນ ຫລື ກາງຄືນອີກຕໍ່ໄປ, ເພາະວ່າເວລາແລງຈະເປັນເວລາຂອງແສງສະຫວ່າງ. 8ໃນວັນນັ້ນ ນ້ຳແຫ່ງຊີວິດຈະໄຫລອອກຈາກນະຄອນເຢ-
ຣູຊາເລັມ. ເຄິ່ງຫນຶ່ງໄຫລໄປສູ່ນ້ຳທະເລທິດຕາເວັນອອກ ແລະອີກເຄິ່ງຫນຶ່ງໄຫລໄປສູ່ທະເລທິດຕາເວັນຕົກ, ໃນລະດູຮ້ອນແລະລະດູຫນາວ.
9ພຣະຢາເວຈະເປັນກະສັດເຫນືອແຜ່ນດິນໂລກທັງສິ້ນ. ໃນວັນນັ້ນ ຈະມີພຣະຢາເວ, ເປັນພຣະເຈົ້າອົງດຽວ, ແລະມີພຽງພຣະ-
ນາມຂອງພຣະອົງເທົ່ານັ້ນ. 10ແຜ່ນດິນທັງຫມົດຈະເປັນເຫມືອນທົ່ງຮາບພຽງ, ຈາກເກບາຈົນຮອດທິດໃຕ້ຣິມໂມນຂອງນະຄອນເຢຣູຊາເລັມ.
ນະຄອນເຢຣູຊາເລັມຈະຍັງຄົງຖືກຍົກສູງຂຶ້ນຢ່າງຕໍ່ເນື່ອງ ແລະ ຢູ່ໃນບ່ອນຂອງມັນ, ຕັ້ງແຕ່ປະຕູເບັນຢາມິນ, ຈົນຮອດປະຕູເກົ່າ, ປະຕູຢູ່ແຈ,
ແລະຈາກຫໍຄອຍເມືອງຮານາເນນ ເຖິງບ່ອນບີບນ້ຳອະງຸ່ນຂອງກະສັດ. 11ປະຊາຊົນຈະອາໄສຢູ່ໃນນະຄອນເຢຣູຊາເລັມ ແລະ
ພຣະເຈົ້າຈະບໍ່ທຳລາຍລ້າງພວກເຂົາຈົນຫມົດກັຽງອີກຕໍ່ໄປ. ຊາວເຢຣູຊາເລັມ ຈະມີຊີວິດຢູ່ຢ່າງປອດໄພ.
12ນີ້ຈະເປັນໄພພິບັດທີ່ພຣະຢາເວຈະໂຈມຕີປະຊາຊົນທັງຫລາຍ ທີ່ຮັບຈ້າງເຮັດສົງຄາມຕໍ່ສູ້ກັບນະຄອນເຢຣູຊາເລັມ: ເນື້ອຫນັງຂອງພວກເຂົາຈະ
ເນົ່າເປື່ອຍລົງ, ແມ້ວ່າພວກເຂົາກຳລັງຈະຢືນຢູ່. ດວງຕາທັງຫລາຍຂອງພວກເຂົາຈະເນົ່າເປື່ອຍໃນເບົ້າຕາຂອງພວກເຂົາທັງຫລາຍ. ລີ້ນ
ທັງຫລາຍຂອງພວກເຂົາຈະເນົ່າເປື່ອຍໃນປາກຂອງພວກເຂົາ. 13ໃນວັນນັ້ນ ຄວາມຢ້ານກົວອັນຍິ່ງໃຫ່ຍຈາກພຣະຢາເວຈະມີຢູ່ໃນທ່າມກາງພວກ-
ເຂົາ. ແຕ່ລະຄົນຈະຈັບມືຊຶ່ງກັນແລະກັນ, ແລະມືຂອງຄົນຫນຶ່ງຈະຍົກມືຂຶ້ນຕໍ່ສູ້ມືຂອງອີກຄົນຫນຶ່ງ.
14ຢູດາຈະຕໍ່ສູ້ກັນໃນນະຄອນເຢຣູຊາເລັມເຫມືອນກັນ. ພວກເຂົາຈະຮວບລວມຄວາມຮັ່ງມີທັງຫມົດ ອ້ອມຮອບ ບັນດາປະຊາຊາດ ຄືເງິນ, ຄຳ
ແລະເສື້ອຜ້າຈຳນວນຫລວງຫລາຍ. 15ໄພພິບັດຢ່າງນີ້ຈະຕົກຖືກ ມ້າ, ລໍ, ອູດ, ລາ ແລະສັດທຸກຊະນິດທີ່ຢູ່ໃນເຕັນ
ເຫລົ່ານັ້ນຈະມີຄວາມທຸກລຳບາກ ເພາະໄພພິບັດດຽວກັນ.
16ແລ້ວມັນຈະເກີດຂຶ້ນຄືຄົນທັງຫມົດທີ່ເຫລືອຢູ່ໃນປະຊາຊາດເຫລົ່ານັ້ນ ທີ່ມາສູ້ຮົບກັບນະຄອນເຢຣູຊາເລັມ ນັ້ນຈະຂຶ້ນມາທຸກໆປີ
ເພື່ອນະມັດສະການກະສັດ, ຄືພຣະຢາເວຈອມໂຍທາ, ແລະ ຮັກສາເທດສະການປຸກຕູບ. 17ມັນຈະເກີດຂຶ້ນ ຖ້າຄົນໃດ
ຈາກບັນດາປະຊາຊາດຂອງແຜ່ນດິນໂລກ ບໍ່ຂຶ້ນໄປເຢຣູຊາເລັມ ເພື່ອຂາບໄຫວ້ນະມັດສະການກະສັດ, ຄືພຣະຢາເວຈອມໂຍທາ,
ແລ້ວພຣະຢາເວຈະບໍ່ໃຫ້ນ້ຳຝົນຕົກໃສ່ຄອບຄົວຂອງພວກເຂົາ. 18ຖ້າປະຊາຊາດຂອງອີຢີບບໍ່ຂຶ້ນໄປ, ພວກເຂົາກໍຈະບໍ່ໄດ້ຮັບຝົນ. ໄພພິບັດຈາກ
ພຣະຢາເວຈະໂຈມຕີປະຊາຊາດທັງຫລາຍ ທີ່ບໍ່ຂຶ້ນໄປຮັກສາເທດສະການປຸກຕູບ.
19ນີ້ຈະເປັນການລົງໂທດສຳລັບອີຢີບ ແລະ ການລົງໂທດປະຊາຊາດທັງຫມົດ ທີ່ບໍ່ຂຶ້ນໄປຮັກສາເທດສະການປຸກຕູບ.
20ແຕ່ໃນວັນນັ້ນ, ຫມາກກະດິງທີ່ຜູກມ້າທັງຫລາຍຈະມີຄຳຈາລຶກວ່າ, “ຈົ່ງແຍກໄວ້ແດ່ພຣະຢາເວ,” ແລະ ຫມໍ້ທັງຫລາຍໃນພຣະວິຫານຂອງ
ພຣະຢາເວຈະເຫມືອນຖ້ວຍທັງຫລາຍຕໍ່ຫນ້າແທ່ນບູຊາ. 21ເພາະຫມໍ້ທຸກຫນ່ວຍໃນເຢຣູຊາເລັມ ແລະ ຢູດາ
ຈະຖືກແຍກໄວ້ແດ່ພຣະຢາເວຈອມໂຍທາ ແລະ ທຸກຄົນທີ່ນຳ ເຄື່ອງບູຊາມາຈະກິນຈາກພວກມັນທັງຫລາຍ ແລະ ຕົ້ມພວກມັນ. ໃນວັນນັ້ນຈະບໍ່
ມີພວກພໍ່ຄ້າທັງຫລາຍໃນພຣະວິຫານຂອງພຣະຢາເວຈອມໂຍທາອີກຕໍ່ໄປ.

# ມາລະກີ

1 1ນີ້ແມ່ນຄຳປະກາດ ພຣະທຳຂອງພຣະຢາເວ ທີ່ບອກຕໍ່ຊົນຊາດອິສຣາເອນໂດຍ ລາຍມືຂອງມາລາກີວ່າ, 2ພຣະຢາເວກ່າວວ່າ,
“ເຮົາໄດ້ຮັກພວກເຈົ້າ." ແຕ່ພວກເຈົ້າຕອບວ່າ, "ພຣະອົງໄດ້ຮັກພວກຂ້ານ້ອຍຢ່າງໃດ?” ພຣະຢາເວຊົງປະກາດວ່າ,
“ເອຊາວເປັນອ້າຍຂອງຢາໂຄບບໍ່ແມ່ນບໍ? ເຮົາກໍຍັງຮັກຢາໂຄບ, 3ແຕ່ເຮົາໄດ້ຊັງເອຊາວ. ເຮົາໄດ້ເຮັດໃຫ້ດິນແດນພູເຂົາຂອງເອຊາວ
ເປັນທີ່ຮ້າງເປົ່າ, ແລະ ເຮັດໃຫ້ມໍລະດົກຂອງເຂົາ ເປັນທີ່ສຳລັບຫມາປ່າແຫ່ງຖິ່ນທຸລະກັນດານ.”

4ຖ້າເອໂດມເວົ້າວ່າ, “ພວກເຮົາໄດ້ຖືກທຳລາຍລົງແລ້ວ, ແຕ່ພວກເຮົາຈະສ້າງຊາກຫັກພັງນັ້ນຂຶ້ນມາໃຫມ່,” ພຣະຢາເວຈອມໂຍທາ
ກໍຈະຕອບວ່າ, “ປ່ອຍໃຫ້ພວກເຂົາສ້າງຂຶ້ນໃຫມ່ໂລດ, ແຕ່ເຮົາຈະທຳລາຍມັນລົງອີກ. ຄົນອື່ນໆຈະເອີ້ນເມືອງນັ້ນວ່າ,
'ດິນແດນແຫ່ງຄວາມຊົ່ວຮ້າຍ' ແລະ 'ເປັນຊົນຊາດທີ່ພຣະຢາເວຊົງສາບແຊ່ງເປັນນິດ.' 5ຕາຂອງພວກເຈົ້າຈະເຫັນສິ່ງນີ້,
ແລະພວກເຈົ້າຈະເວົ້າວ່າ, 'ພຣະຢາເວຊົງຍິ່ງໃຫຍ່ເກີນກວ່າອອກໄປຈາກເຂດແດນຂອງອິດສະຣາເອນ.”
6“ລູກຊາຍໃຫ້ກຽດພໍ່ຂອງຕົນ, ແລະ ຄົນຮັບໃຊ້ກໍໃຫ້ກຽດນາຍຂອງຕົນ. ແລ້ວຖ້າເຮົາເປັນພໍ່, ກຽດຂອງເຮົາຢູ່ໃສ? ຖ້າເຮົາເປັນນາຍ,
ຄວາມເຄົາລົບຕໍ່ເຮົາຢູ່ໃສ? ພຣະຢາເວຈອມໂຍທາຊົງກ່າວກັບພວກປະໂລຫິດວ່າ, ຜູ້ຫມິ່ນປະຫມາດນາມຂອງເຮົາ. "ແຕ່ພວກເຈົ້າຍັງຖາມວ່າ,
'ພວກຂ້ານ້ອຍໄດ້ຫມິ່ນປະຫມາດພຣະນາມຂອງພຣະອົງຢ່າງໃດ?' 7ກໍໂດຍການຖວາຍອາຫານທີ່ມີມົນທິນ ເທິງແທ່ນບູຊາຂອງເຮົາ.


generated on Tue Jun 17 19:01:42 2025

ແຕ່ພວກເຈົ້າກໍຖາມວ່າ, 'ພວກຂ້ານ້ອຍໄດ້ເຮັດໃຫ້ເປັນມົນທິນ ຕໍ່ພຣະອົງຢ່າງໃດ?'
ກໍໂດຍການເວົ້າວ່າແທ່ນບູຊາຂອງພຣະຢາເວເປັນທີ່ຫນ້າລັງກຽດ.
[8]ເມື່ອພວກເຈົ້າຖວາຍສັດຕາບອດ ເປັນເຄື່ອງບູຊາ, ນັ້ນບໍ່ຊົ່ວຮ້າຍບໍ? ເມື່ອພວກເຈົ້າຖວາຍສັດຂາຫັກ ແລະ ສັດເປັນພະຍາດ, ນັ້ນບໍ່ຊົ່ວຮ້າຍບໍ?
ຈົ່ງເອົາສັດເຫລົ່ານັ້ນໄປໃຫ້ຜູ້ປົກຄອງເມືອງຂອງເຈົ້າລອງເບິ່ງດູ! ເພິ່ນຈະຮັບຈາກພວກເຈົ້າ ຫລື ເພິ່ນຈະພໍໃຈເຈົ້າຫລືບໍ?”
ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.[9]“ບັດນີ້ ພວກເຈົ້າຕ້ອງພະຍາຍາມສະແຫວງຫາພຣະພັກຂອງພຣະເຈົ້າຕໍ່ໄປ,
ເພື່ອທີ່ພຣະອົງຈະຊົງພຣະກະລຸນາຕໍ່ພວກເຮົາ. ແຕ່ພຣະຢາເວຈອມໂຍທາຊົງກ່າວວ່າ, ເນື່ອງດ້ວຍເຄື່ອງບູຊາຢ່າງນັ້ນໃນມືຂອງພວກເຈົ້າ,
ພຣະອົງຈະຊົງພໍໃຈນໍາພວກເຈົ້າບໍ?
[10]"ໂອ, ເຮົາຢາກໃຫ້ມີຈັກຄົນຫນຶ່ງໃນພວກເຈົ້າອັດປະຕູພຣະວິຫານ, ເພື່ອບໍ່ໃຫ້ພວກເຈົ້າໄຕ້ໄຟເທິງແທ່ນບູຊາຂອງເຮົາຢ່າງໄຮ້ປະໂຫຍດ!
ເຮົາບໍ່ມີຄວາມພໍໃຈໃນພວກເຈົ້າ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ, "ແລະ ເຮົາຈະບໍ່ຍອມຮັບເຄື່ອງບູຊາໃດໆ ຈາກມືຂອງພວກເຈົ້າ.
[11]ເພາະຈາກທິດຕາເວັນອອກຫາທິດຕາເວັນຕົກ ນາມຂອງເຮົາກໍຍິ່ງໃຫຍ່ທ່າມກາງຊົນຊາດທັງຫລາຍ ແລະ ໃນທຸກຫົນທຸກແຫ່ງທີ່ເຄື່ອງຫອມ ແລະ
ເຄື່ອງເຜົາບູຊາບໍຣິສຸດຈະຖວາຍໃນນາມຂອງເຮົາ. ເພາະນາມຂອງເຮົາຈະຍິ່ງໃຫຍ່ທ່າມກາງຊົນຊາດທັງຫລາຍ,"
ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.[12]ແຕ່ພວກເຈົ້າກໍາລັງຫມິ່ນປະຫມາດແທ່ນບູຊາຂອງເຮົາ, ເມື່ອເຈົ້າເວົ້າວ່າ
ແທ່ນບູຊາຂອງອົງພຣະຜູ້ເປັນເຈົ້າຫນ້າຂີ້ດຽດ, ແລະ ວ່າຫມາກໄມ້ຂອງມັນ, ອາຫານຂອງມັນ, ເປັນທີ່ດູຫມິ່ນ.
[13]ພວກເຈົ້າເວົ້າອີກວ່າ, 'ຊ່າງອິດເມື່ອຍຕໍ່ການຖວາຍນີ້ແທ້,' ແລະ ພວກເຈົ້າກໍງຶກດັງຂຶ້ນປະຫມາດເຮົາ,"
ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ. "ພວກເຈົ້ານໍາສັດທີ່ຖືກສັດປ່າຄາບ ຫລື ສັດຂາຫັກ ຫລື ສັດເປັນພະຍາດ; ແລະ
ພວກເຈົ້ານໍາສິ່ງນີ້ມາເປັນເຄື່ອງຖວາຍຂອງເຈົ້າ. ເຮົາຄວນຈະຍອມຮັບສິ່ງນີ້ ຈາກມືຂອງພວກເຈົ້າບໍ? ພຣະຢາເວກ່າວ.
[14]"ຂໍໃຫ້ຄົນຫລອກຫລວງຖືກສາບແຊ່ງ ຜູ້ທີ່ມີສັດໂຕຜູ້ໃນຝູງຂອງເຂົາ ແລະສັນຍາວ່າຈະຖວາຍສິ່ງທີ່ດີໃຫ້ແກ່ເຮົາ, ແຕ່ແລ້ວ
ເຂົາໄດ້ນໍາເອົາສັດທີ່ມີຕໍານິມາເຜົາຖວາຍບູຊາແກ່ເຮົາ! ເຮົາເປັນພຣະມະຫາກະສັດ," ພຣະຢາເວຈອມໂຍທາ ຊົງກ່າວດັ່ງນີ້ແຫລະ,
"ແລະນາມຂອງເຮົາເປັນທີ່ຢໍາເກງ ທ່າມກາງປະຊາຊາດທັງຫລາຍ.”

 generated on Tue Jun 17 19:01:42 2025

2 [1]“ບັດນີ້ພວກປະໂລຫິດທັງຫລາຍເອີຍ, ນີ້ຄືຄຳສັ່ງສຳລັບພວກເຈົ້າ. ພຣະຢາເວຈອມໂຍທາຊົງກ່າວວ່າ,[2]"ຖ້າພວກເຈົ້າບໍ່ຍອມຟັງ,
ແລະຖ້າພວກເຈົ້າບໍ່ໃສ່ໃຈທີ່ຈະຖວາຍກຽດຕໍ່ນາມຂອງເຮົາ, ແລ້ວເຮົາຈະສົ່ງຄວາມສາບແຊ່ງມາເຫນືອພວກເຈົ້າ, ແລະ
ເຮົາຈະສາບແຊ່ງພຣະພອນຂອງພວກເຈົ້າ. ທີ່ຈິງແລ້ວ, ເຮົາໄດ້ສາບແຊ່ງພຣະພອນເຫລົ່ານັ້ນແລ້ວ,
ເພາະພວກເຈົ້າບໍ່ໄດ້ໃສ່ໃຈຄຳບັນຊາຂອງເຮົາ.

[3]ເບິ່ງເຖີດ, ເຮົາກຳລັງຮ້າຍດ່າລູກຂອງພວກເຈົ້າ, ແລະ ເຮົາຈະເອົາຂີ້ສັດທາໃສ່ຫນ້າຂອງພວກເຈົ້າ, ທີ່ເປັນຂີ້ສັດຈາກງານລ້ຽງຂອງພວກເຈົ້າ,
ແລະ ເຂົາກໍຈະໂຍນພວກເຈົ້າຖິ້ມໄປພ້ອມກັບຂີ້ສັດນັ້ນ.[4]ພວກເຈົ້າກໍຈະຮູ້ວ່າ ເຮົາໄດ້ສົ່ງຄຳສັ່ງນີ້ມາໃຫ້ພວກເຈົ້າ, ແລະ
ເພື່ອວ່າພັນທະສັນຍາຂອງເຮົາ ທີ່ເຮັດໄວ້ກັບຄົນເລວີຈະຍັງຄົງຢູ່ສືບໄປ,” ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.
[5]ພັນທະສັນຍາຂອງເຮົາທີ່ໃຫ້ກັບເຂົາໄດ້ເປັນຊີວິດ ແລະ ສັນຕິສຸກ, ແລະເຮົາໄດ້ໃຫ້ສິ່ງເຫລົ່ານີ້ແກ່ເຂົາ; ເຮົາໄດ້ໃຫ້ຄວາມຢຳເກງແກ່ເຂົາ,
ແລະເຂົາໃຫ້ຄວາມຢຳເກງແກ່ເຮົາ, ແລະ ເຂົາໄດ້ຢືນຂຶ້ນດ້ວຍຄວາມຢ້ານກົວຕໍ່ນາມຂອງເຮົາ.[6]ຄຳສອນທີ່ເປັນຄວາມຈິງໄດ້ຢູ່ໃນປາກຂອງເຂົາ,
ແລະ ບໍ່ມີຄວາມຜິດໃດໆທີ່ຮີມສົບຂອງເຂົາ. ເຂົາໄດ້ເດີນໄປກັບເຮົາຢ່າງຜາສຸກ ແລະ ທ່ຽງທຳ
ແລະເຂົາໄດ້ຊ່ວຍຫລາຍຄົນໃຫ້ຫັນຫນີຈາກບາບ.[7]ເພາະຮີມສົບຂອງປະໂລຫິດຄວນຮັກສາຄວາມຮູ້ໄວ້ ແລະ
ປະຊາຊົນຄວນສະແຫວງຫາຄຳສອນຈາກປາກຂອງເຂົາ, ເພາະວ່າເຂົາເປັນທູດຂອງພຣະຢາເວແຫ່ງຈອມໂຍທາ.
[8]ແຕ່ພວກເຈົ້າໄດ້ຫັນຫນ້າຫນີຈາກທາງແຫ່ງຄວາມຈິງ. ພວກເຈົ້າໄດ້ພາໃຫ້ຫລາຍຄົນສະດຸດ ດ້ວຍການເຄົາລົບຕໍ່ກົດຫມາຍນັ້ນ.
ພວກເຈົ້າໄດ້ລະເມີດພັນທະສັນຍາຂອງຄົນ ເລວີ." ພຣະຢາເວຈອມໂຍທາ ຊົງກ່າວດັ່ງນີ້ແຫລະ.[9]"ສະນັ້ນ, ເຮົາກໍເຊັ່ນດຽວກັນ
ເຮົາໄດ້ເຮັດໃຫ້ພວກເຈົ້າເປັນທີ່ດູຫມິ່ນ ແລະ ດູຖູກຕໍ່ຫນ້າປະຊາຊົນທັງປວງ, ເພາະວ່າພວກເຈົ້າບໍ່ໄດ້ຖືຮັກສາທາງຂອງເຮົາ,
ແຕ່ໄດ້ສະແດງຄວາມລຳອຽງກ່ຽວກັບຄຳສອນນັ້ນ."
[10]ພວກເຮົາທຸກຄົນມີພຣະບິດາອົງດຽວກັນບໍ່ແມ່ນບໍ? ພຣະເຈົ້າອົງດຽວໄດ້ສ້າງພວກເຮົາບໍ່ແມ່ນບໍ? ດ້ວຍເຫດໃດພວກເຮົາຈຶ່ງບໍ່ຊື່ສັດຕໍ່ກັນແລະ
ກັນ, ຕໍ່ພີ່ນ້ອງຂອງເຂົາ ຊຶ່ງເຮັດໃຫ້ພັນທະສັນຍາຂອງບັນພະບູລຸດ ຂອງພວກເຮົາເປັນທີ່ດູຫມິ່ນ?[11]ຢູດາກໍບໍ່ຊື່ສັດ.
ສິ່ງທີ່ຫນ້າກຽດຊັງໄດ້ເກີດຂຶ້ນໃນອິດສະຣາເອນ ແລະ ໃນນະຄອນເຢຣູຊາເລັມ. ພວກຢູດາໄດ້ດູຫມິ່ນສະຖານສັກສິດຂອງພຣະຢາເວ
ທີ່ພຣະອົງຊົງຮັກ ແລະ ໄດ້ແຕ່ງງານກັບບຸດຍິງຂອງພະຕ່າງຊາດ.[12]ຂໍໃຫ້ພຣະຢາເວທຳລາຍຄົນທີ່ກະທຳເຊັ່ນນີ້ ອອກໄປຈາກເຕັ້ນຂອງຢາໂຄບ,
ພຣະອົງດຽວຜູ້ຊົງຕື່ນຢູ່ແລະ ພຣະອົງຊົງເປັນຜູ້ດຽວທີ່ຕອບ, ເຖິງແມ່ນວ່າ
ພວກເຂົາກຳລັງນຳເຄື່ອງບູຊາມາຖວາຍແກ່ພຣະຢາເວຈອມໂຍທາກໍຕາມເຖີດ.
[13]ພວກເຈົ້າກໍເຮັດຢ່າງນີ້ດ້ວຍ: ພວກເຈົ້າໄດ້ເອົານ້ຳຕາຫົດໃສ່ທົ່ວແທ່ນບູຊາຂອງພຣະຢາເວ, ດ້ວຍການຮ້ອງໄຫ້ ແລະ ດ້ວຍການຄວນຄາງ,
ເພາະວ່າພຣະອົງບໍ່ແມ່ນແຕ່ຫລຽວເບິ່ງເຄື່ອງບູຊາ ຫລື ບໍ່ຊົງຍອມຮັບຈາກມືຂອງພວກເຈົ້າດ້ວຍຄວາມພໍໃຈ.
[14]ແຕ່ພວກເຈົ້າເວົ້າວ່າ, “ເພາະເຫດໃດພຣະອົງຈຶ່ງບໍ່ຊົງຍອມຮັບ?” ເພາະວ່າພຣະຢາເວໄດ້ຊົງເປັນພະຍານລະຫວ່າງເຈົ້າກັບເມຍ,
ຜູ້ທີ່ເຈົ້າແຕ່ງງານເມື່ອຍັງຫນຸ່ມ, ຕໍ່ເຈົ້າຜູ້ທີ່ບໍ່ຊື່ສັດ, ແມ່ນວ່າເຈົ້າໄດ້ນາງເປັນຄູ່ຄອງຂອງເຈົ້າ ແລະ ເປັນເມຍຂອງເຈົ້າໂດຍພັນທະສັນຍາ.
[15]ພຣະອົງຊົງເຮັດໃຫ້ເຈົ້າກັບນາງເປັນຫນຶ່ງດຽວກັນ ໃຫ້ມີສ່ວນກັບພຣະວິນຍານຂອງພຣະອົງບໍ່ແມ່ນບໍ?
ແລ້ວດ້ວຍເຫດໃດພຣະອົງຈຶ່ງຊົງມີເຈດຕະນາເຮັດໃຫ້ພວກເຈົ້າເປັນຫນຶ່ງດຽວກັນ? ກໍເພາະພຣະອົງປະສົງທີ່ຈະໄດ້ລູກທີ່ມາຈາກພຣະເຈົ້າ.
ເພາະສະນັ້ນ ຈົ່ງລະວັງຈິດໃຈຂອງເຈົ້າເອງໃຫ້ດີ ແລະ ຢ່າລະເມີດຄຳສັນຍາທີ່ໄດ້ເຮັດໄວ້ກັບເມຍເມື່ອຄາວເຈົ້າຍັງຫນຸ່ມ.
[16]ພຣະຢາເວພຣະເຈົ້າແຫ່ງອິດສະຣາເອນກ່າວວ່າ, “ເພາະເຮົາກຽດຊັງການຢ່າຮ້າງ ແລະ ຄົນທີ່ຄຸມເສື້ອຜ້າຂອງເຂົາດ້ວຍຄວາມທາລຸນ,"
ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ. "ດັ່ງນັ້ນ ຈົ່ງລະວັງຈິດໃຈຂອງເຈົ້າເອງໃຫ້ດີ ແລະ ຢ່ານອກໃຈເມຍຂອງເຈົ້າ."
[17]ພວກເຈົ້າໄດ້ເຮັດໃຫ້ພຣະຢາເວຊົງເມື່ອຍພຣະໄທດ້ວຍຄວາມເວົ້າຂອງເຈົ້າ. ແຕ່ເຈົ້າຍັງກ້າເວົ້າວ່າ,
“ພວກເຮົາໄດ້ເຮັດໃຫ້ພຣະອົງຊົງເມື່ອຍພຣະໄທຢ່າງໃດ? ກໍໂດຍການເວົ້າວ່າ, “ທຸກຄົນທີ່ກະທຳຊົ່ວຮ້າຍ
ກໍເປັນຄົນດີໃນສາຍພຣະເນດຂອງພຣະຢາເວ ແລະ ພຣະອົງຊົງພໍພຣະໄທໃນຄົນເຫລົ່ານັ້ນ," ຫລື "ພຣະເຈົ້າຜູ້ຊົງຍຸດຕິທຳນັ້ນຢູ່ໃສ?”

 generated on Tue Jun 17 19:01:42 2025

3 [1]"ເບິ່ງເຖີດ, ເຮົາກຳລັງຈະສົ່ງທູດຂອງເຮົາໄປ, ແລະ ເຂົາຈະຕຽມຫົນທາງຂ້າງຫນ້າເຮົາ. ແລ້ວອົງພຣະຜູ້ເປັນເຈົ້າ,
ທີ່ພວກເຈົ້າສະແຫວງຫາ, ກໍຈະສະເດັດມາທີ່ພຣະວິຫານຂອງພຣະອົງໃນທັນທີທັນໃດ. ທູດແຫ່ງພັນທະສັນຍາໃນພວກທີ່ພວກເຈົ້າພໍໃຈ,
ເບິ່ງແມ, ພຣະອົງຈະສະເດັດມາ," ພຣະຢາເວແຫ່ງຈັກກະວານຊົງຕອບດັ່ງນີ້ແຫລະ.
[2]ແຕ່ໃຜຈະທົນຢູ່ໄດ້ໃນວັນແຫ່ງການສະເດັດມາຂອງພຣະອົງ? ໃຜຈະຢືນຢູ່ໄດ້ເມື່ອພຣະອົງຊົງປະກົດ?
ພຣະອົງຈະເປັນເຫມືອນໄຟທີ່ຫລອມໂລຫະ ແລະ ເປັນດັ່ງສະບູທີ່ມີພະລັງແຮງຊັກລ້າງ.[3]ພຣະອົງຈະສະເດັດມາຕັດສິນດັ່ງຊ່າງຫລອມແຮ່ ແລະ
ເປັນເຫມືອນກັບຊ່າງລ້າງເງິນໃຫ້ບໍຣິສຸດ, ແລະ ພຣະອົງຈະຊຳລະບັນດາລູກຊາຍຂອງເລວີໃຫ້ບໍຣິສຸດ.
ພຣະອົງຈະຊົງຫລອມພວກເຂົາເຫມືອນກັບຫລອມທອງຄຳ ແລະ ເງິນ,
ແລະພວກເຂົາຈະນຳເຄື່ອງບູຊາແຫ່ງຄວາມຊອບທຳມາຖວາຍແດ່ພຣະຢາເວ.

[4]ແລ້ວເຄື່ອງບູຊາຂອງຊາວຢູດາ ແລະ ຊາວເຢຣູຊາເລັມຈະເປັນທີ່ພໍພຣະໄທພຣະຢາເວ, ເຫມືອນກັບສະໄຫມກ່ອນ, ແລະ
ເຫມືອນໃນຫລາຍໆປີໃນສະໄຫມໂບຮານ.[5]"ແລ້ວເຮົາຈະມາໃກ້ພວກເຈົ້າເພື່ອພິພາກສາ.
ເຮົາຈະກາຍເປັນພະຍານຢ່າງໄວເພື່ອກ່າວໂທດຕໍ່ບັນດາຄົນໃຊ້ເວດມົນຄາຖາ, ຄົນລ່ວງປະເວນີ, ຄົນທີ່ເປັນພະຍານເທັດ, ແລະ
ຄົນທີ່ບີບບັງຄັບລູກຈ້າງເລື່ອງຄ່າແຮງງານຂອງພວກເຂົາ, ພວກຄົນທີ່ບີບບັງຄັບແມ່ຫມ້າຍ ແລະລູກກຳພ້າ, ຕໍ່ສູ້ຄົນຂັບໄລ່ຄົນຕ່າງດ້າວ, ແລະ
ຕໍ່ພວກທີ່ບໍ່ຢຳເກງເຮົາ," ພຣະຢາເວຈອມໂຍທາຊົງຕອບດັ່ງນີ້ແຫລະ.
[6]"ເພາະວ່າເຮົາຄື, ພຣະຢາເວ, ຜູ້ຊົງບໍ່ປ່ຽນແປງ; ເພາະສະນັ້ນ, ພວກເຈົ້າເຊື້ອສາຍຂອງຢາໂຄບ, ບໍ່ໄດ້ມາເຖິງຈຸດຈົບ.
[7]ຈາກສະໄຫມທີ່ບັນພະບູລຸດຂອງພວກເຈົ້າໄດ້ຫັນຫນີໄປຈາກກົດເກນຂອງເຮົາ ແລະ ບໍ່ໄດ້ຖືຮັກສາໄວ້. ຈົ່ງກັບມາຫາເຮົາ ແລະ
ເຮົາຈະກັບໄປຫາພວກເຈົ້າ," ພຣະຢາເວຈອມໂຍທາ ຊົງເວົ້າດັ່ງນີ້ແຫລະ. "ແຕ່ພວກເຈົ້າຖາມວ່າ,
'ພວກຂ້ານ້ອຍຈະກັບໄປຫາພຣະອົງໄດ້ຢ່າງໃດ?'
[8]ມະນຸດຈະປຸ້ນພຣະເຈົ້າໄດ້ບໍ? ແຕ່ພວກເຈົ້າກຳລັງປຸ້ນເຮົາຢູ່. ແຕ່ພວກເຈົ້າຖາມວ່າ, 'ພວກຂ້ານ້ອຍໄດ້ປຸ້ນພຣະອົງຢ່າງໃດ?'
ກໍປຸ້ນດ້ວຍເລື່ອງຫນຶ່ງສ່ວນສິບ ແລະ ເຄື່ອງຖວາຍນັ້ນແຫລະ.[9]ພວກເຈົ້າໄດ້ຖືກສາບແຊ່ງດ້ວຍຄຳສາບແຊ່ງ ເພາະພວກເຈົ້າທັງຊົນຊາດ,
ກຳລັງປຸ້ນເຮົາ.
[10]ຈົ່ງນຳເງິນຫນຶ່ງສ່ວນສິບເຕັມຈຳນວນມາໄວ້ທີ່ຄັງ, ເພື່ອວ່າຈະມີອາຫານໃນພຣະວິຫານຂອງເຮົາ, ແລະ ຈົ່ງລອງເບິ່ງເຮົາໃນເລື່ອງນີ້,"
ພຣະຢາເວຈອມໂຍທາ ຊົງກ່າວດັ່ງນີ້ແຫລະ, "ວ່າເຮົາຈະໄຂປະຕູສະຫວັນ ແລະ ເທພຣະພອນລົງມາໃຫ້ພວກເຈົ້າ
ຈົນບໍ່ມີບ່ອນຫວ່າງສຳລັບເກັບພຣະພອນທັງຫມົດຫລືບໍ່.[11]ເຮົາຈະກ່າວໂທດໃສ່ພວກຄົນທີ່ມາທຳລາຍຜົນລະປູກຂອງພວກເຈົ້າ,
ເພື່ອພວກເຂົາຈະບໍ່ທຳລາຍການເກັບກ່ຽວຂອງແຜ່ນດິນຂອງເຈົ້າ. ເຄືອອະງຸ່ນຂອງພວກເຈົ້າໃນສວນຈະບໍ່ໄຮ້ຜົນ,"
ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.[12]ຊົນຊາດທັງຫລາຍຈະເອີ້ນພວກເຈົ້າວ່າ ຜູ້ຮັບພຣະພອນ,
ເພາະວ່າພວກເຈົ້າຈະເປັນແຜ່ນດິນທີ່ຫນ້າພໍໃຈ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.
[13]"ຖ້ອຍຄຳຂອງພວກເຈົ້າທີ່ກ່າວໃສ່ຮ້າຍຕໍ່ເຮົານັ້ນຮຸນແຮງ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ. "ແຕ່ພວກເຈົ້າເວົ້າວ່າ,
'ພວກຂ້ານ້ອຍໄດ້ເວົ້າກ່າວໃສ່ຮ້າຍຫຍັງແກ່ພຣະອົງທ່າມກາງພວກຂ້ານ້ອຍ?'[14]ພວກເຈົ້າໄດ້ເວົ້າວ່າ, 'ຮັບໃຊ້ພຣະເຈົ້າເປັນການໄຮ້ປະໂຫຍດ.
ການທີ່ເຮົາໄດ້ຖືຮັກສາຕາມພຣະປະສົງຂອງພຣະອົງ ຫລື ຍ່າງຢ່າງໂສກເສົ້າຕໍ່ພຣະພັກຂອງພຣະຢາເວຈອມເຈົ້ານາຍຈະມີປະໂຫຍດອັນໃດ?
[15]ດັ່ງນັ້ນ ບັດນີ້ ພວກເຮົາອວດຕົວວ່າເປັນຜູ້ໄດ້ຮັບພຣະພອນ ຄົນເຮັດຊົ່ວບໍ່ພຽງແຕ່ຮັ່ງມີ, ແຕ່ພວກເຂົາຍັງໄດ້ທົດລອງພຣະເຈົ້າ ແລະ
ຫນີລອດໄປໄດ້."
[16]ແລ້ວຄົນເຫລົ່ານັ້ນທີ່ຢຳເກງພຣະຢາເວໄດ້ເວົ້າກັນວ່າ, ພຣະຢາເວໄດ້ຊົງໃສ່ພຣະໄທ ແລະ ຊົງຟັງ, ແລະ
ມີປຶ້ມບັນທຶກຄວາມຈຳຫົວຫນຶ່ງໄດ້ຂຽນຕໍ່ພຣະພັກຂອງພຣະອົງກ່ຽວກັບຄົນເຫລົ່ານັ້ນ ທີ່ຢຳເກງພຣະຢາເວ ແລະ
ຖວາຍກຽດແດ່ພຣະນາມຂອງພຣະອົງ.
[17]"ພວກເຂົາຈະເປັນໄພ່ພົນຂອງເຮົາ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ, "ກຳມະສິດອັນລ້ຳຄ່າຂອງເຮົາເອງ,
ໃນວັນນັ້ນທີ່ເຮົາເຮັດພະລະກິດ. ເຮົາຈະກະລຸນາພວກເຂົາເຫມືອນກັບພໍ່ກະລຸນາລູກຊາຍຂອງເຂົາເອງ ທີ່ຮັບໃຊ້ເຂົາ.
[18]ພວກເຈົ້າຈະແຍກແຍະລະຫວ່າງຄົນຊອບທຳ ກັບຄົນຊົ່ວຮ້າຍ ລະຫວ່າງຄົນທີ່ນະມັດສະການພຣະເຈົ້າ
ກັບຄົນທີ່ບໍ່ນະມັດສະການພຣະອົງໄດ້ອີກຄັ້ງຫນຶ່ງ."

 generated on Tue Jun 17 19:01:42 2025

4 [1]ຈົ່ງເບິ່ງເຖີດ, ມື້ນັ້ນກຳລັງມາເຖິງ, ຊຶ່ງຈະເຜົາຜານເຫມືອນໄຟໃນເຕົາໄຟ, ເມື່ອຄົນອວດອ້າງທຸກຄົນ ກັບຄົນທີ່ເຮັດຊົ່ວທັງຫມົດ
ຈະເປັນເຫມືອນຕໍເຂົ້າ. ມື້ນັ້ນທີ່ກຳລັງຈະມາເຖິງຈະເຜົາຜານພວກເຂົາທັງຫມົດ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ,
"ເພື່ອວ່າມື້ນັ້ນຈະບໍ່ມີເຫລືອພວກເຂົາໄວ້ເລີຍບໍ່ວ່າຮາກ ຫລື ກິ່ງ.[2]ແຕ່ສຳລັບພວກເຈົ້າທີ່ຢຳເກງພຣະນາມຂອງເຮົາ,
ດວງຕາເວັນແຫ່ງຄວາມຊອບທຳຈະຂຶ້ນມາ ດ້ວຍການຮັກສາໃນປີກຂອງມັນ. ພວກເຈົ້າຈະອອກໄປ, ແລະ ພວກເຈົ້າຈະກະໂດດໂລດເຕັ້ນ
ເຫມືອນລູກງົວທີ່ອອກຈາກຄອກ.[3]ໃນມື້ນັ້ນພວກເຈົ້າຈະຢຽບຄົນຊົ່ວຮ້າຍ, ເພາະພວກເຂົາຈະເປັນຂີ້ເຖົ່າຢູ່ກ້ອງພື້ນຕີນຂອງພວກເຈົ້າ
ໃນມື້ທີ່ເຮົາປະກອບພາລະກິດນັ້ນ," ພຣະຢາເວຈອມໂຍທາຊົງກ່າວດັ່ງນີ້ແຫລະ.

[4]"ຈົ່ງຈື່ຄຳສອນຂອງໂມເຊຜູ້ຮັບໃຊ້ຂອງເຮົາ ພ້ອມທັງກົດເກນ ແລະ ກົດຫມາຍທີ່ເຮົາໄດ້ມອບໃຫ້ແກ່ເຂົາສຳລັບປະຊາຊົນອິດສະຣາເອນ
ທັງຫມົດທີ່ພູເຂົາ ໂຮເຣັບ.[5]ເບິ່ງເຖີດ, ເຮົາຈະສົ່ງ ເອລີຢາ ຜູ້ປະກາດພຣະທຳມາຫາພວກເຈົ້າກ່ອນວັນຍິ່ງໃຫຍ່ ແລະ
ຫນ້າຢ້ານຂອງພຣະຢາເວຈະມາເຖິງ.[6]ເຂົາຈະເຮັດໃຫ້ໃຈຂອງພໍ່ຫັນໄປຫາລູກທັງຫລາຍ
ແລະເຮັດໃຫ້ໃຈຂອງລູກທັງຫລາຍຫັນມາຫາພໍ່ຂອງພວກເຂົາ, ເພື່ອທີ່ເຮົາຈະບໍ່ມາ ແລະ ໂຈມຕີແຜ່ນດິນນັ້ນດ້ວຍການທຳລາຍຈົນສິ້ນຊາກ."

# ມັດທາຍ

1 [1]ບັນທຶກລຳດັບບັນພະບຸຣຸດຂອງພຣະເຢຊູຄຣິດເຈົ້າ ຜູ້ເປັນເຊື້ອສາຍຂອງກະສັດດາວິດ ຜູ້ສືບເຊື້ອສາຍມາຈາກອັບຣາຮາມ.
[2]ອັບຣາຮາມເປັນພໍ່ຂອງອີຊາກ ແລະ ອີຊາກເປັນພໍ່ຂອງຢາໂຄບ ແລະ ຢາໂຄບເປັນພໍ່ຂອງຢູດາ ກັບບັນດາພີ່ນ້ອງຂອງລາວ.
[3]ຢູດາເປັນພໍ່ຂອງເປເຣັດ ກັບເຊຣາ ເຊິ່ງເກີດມາຈາກນາງ ຕາມາ, ສ່ວນເປເຣັດເປັນພໍ່ຂອງເຮຊະໂຣນ, ແລະ ເຮຊະໂຣນເປັນພໍ່ຂອງຣາມ.

[4]ຣາມເປັນພໍ່ຂອງອຳມີນາດາບ, ອຳມີນາດາບເປັນພໍ່ຂອງນາໂຊນ, ແລະ ນາໂຊນເປັນພໍ່ຂອງຊັນໂມນ.[5]ຊັນໂມນເປັນພໍ່ຂອງໂບອາດ
ເຊິ່ງເກີດຈາກນາງຣາຮາບ, ໂບອາດເປັນພໍ່ຂອງໂອເບັດ ເຊິ່ງເກີດຈາກນາງຣຸດ, ໂອເບັດເປັນພໍ່ຂອງເຢຊີ.[6]ເຢຊີເປັນພໍ່ຂອງດາວິດ ຜູ້ຊົງເປັນກະສັດ.
ດາວິດເປັນພໍ່ຂອງຊາໂລມອນ ເຊິ່ງເກີດຈາກເມັຽຂອງອຸຣີຢາ.
[7]ກະສັດໂຊໂລໂມນເປັນບິດາເຣໂຮໂບອາມ, ເຣໂຮໂບອາມເປັນພໍ່ຂອງອະບີຢາ, ອະບີຢາເປັນພໍ່ຂອງອາຊາ.[8]ອາຊາເປັນພໍ່ຂອງເຢໂຮຊາຟັດ,
ເຢໂຮຊາຟັດເປັນພໍ່ຂອງໂຢຣາມ, ແລະ ໂຢຣາມເປັນພໍ່ອຸດຊີຢາ.
[9]ອຸດຊີຢາເປັນພໍ່ຂອງໂຢທາມ, ໂຢທາມເປັນພໍ່ຂອງອາຮາດ, ອາຮາດເປັນພໍ່ຂອງເຮເຊກີຢາ.[10]ເຮເຊກີຢາເປັນພໍ່ຂອງມານາເຊ,
ມານາເຊເປັນພໍ່ຂອງອາໂມນ, ແລະ ອາໂມນເປັນພໍ່ຂອງໂຢສີຢາ.[11]ໂຢສີຢາເປັນພໍ່ຂອງເຢໂຮຢາກິນ ແລະ ອ້າຍນ້ອງຂອງລາວ
ໃນເວລາຖືກກວາດໄປຍັງນະຄອນບາບີໂລນ.`
[12]ພາຍຫລັງຖືກກວາດໄປຍັງນະຄອນບາບີໂລນແລ້ວ, ເຢໂຮຍອາກິນກໍກາຍເປັນພໍ່ຂອງເຊອານຕີເອນ,
ເຊອານຕີເອນເປັນບັນພະບູຣຸດຂອງເຊຣຸບບາເບນ.[13]ເຊຣຸບບາເບນເປັນພໍ່ຂອງອາບີອຸດ, ອາບີອຸດເປັນພໍ່ຂອງເອລີອາກິມ, ແລະ
ເອລີອາກິມເປັນພໍ່ຂອງອາເຊີ,[14]ແລະ ອາເຊີເປັນພໍ່ຂອງຊາດົກ, ຊາດົກເປັນພໍ່ຂອງອາກິມ, ແລະ ອາກິມເປັນພໍ່ຂອງເອລີອຸດ.
[15]ເອລີອຸດເປັນພໍ່ຂອງເອເລອາຊາ, ເອເລອາຊາເປັນພໍ່ຂອງມັດທານ, ແລະ ມັດທານເປັນພໍ່ຂອງຢາໂຄບ.[16]ຢາໂຄບເປັນພໍ່ຂອງໂຢເຊັບ
ສາມີຂອງນາງມາຣີອາ, ເຊິ່ງເປັນຜູ້ທີ່ພຣະເຢຊູຄຣິດເຈົ້າຊົງບັງເກີດດ້ວຍ, ທີ່ຊົງຖືກເອີ້ນວ່າເປັນພຣະຄຣິດເຈົ້າ.
[17]ນັບຕັ້ງແຕ່ດາວິດຈົນເຖິງຄາວຖືກກວາດໄປຍັງກຸງບາບີໂລນ ເປັນເວລາສິບສີ່ຊົ່ວຄົນ ແລະ
ນັບຕັ້ງແຕ່ຄາວຖືກກວາດໄປຍັງນະຄອນບາບີໂລນຈົນເຖິງພຣະຄຣິດເຈົ້າ ເປັນເວລາສິບສີ່ຊົ່ວຄົນ.
[18]ເລື່ອງພຣະກຳເນີດຂອງພຣະເຢຊູຄຣິດເຈົ້າເປັນດັ່ງນີ້. ມານດາຂອງພຣະອົງ, ມາຣີອາ, ໄດ້ຖືກຫມັ້ນຫມາຍເພື່ອແຕ່ງງານກັບໂຢເຊັບ,
ແຕ່ກ່ອນເວລາເຂົາໄດ້ເປັນຄູ່ຜົວເມັຽກັນ, ກໍປະກົດວ່ານາງມີທ້ອງແລ້ວດ້ວຍຣິດເດດພຣະວິນຍານບໍຣິສຸດເຈົ້າ.[19]ສາມີຂອງນາງ, ໂຢເຊັບ,
ເປັນຄົນມີສິລະທັມ, ແລະ ເພິ່ນບໍ່ຢາກໃຫ້ເລື່ອງນີ້ເປັນທີ່ອັບອາຍຂາຍຫນ້ານາງຕໍ່ຜູ້ຄົນ. ດັ່ງນັ້ນ
ເພິ່ນຈຶ່ງໄດ້ວາງແຜນວ່າຈະຖອນຫມັ້ນນາງຢ່າງລັບໆ.
[20]ແຕ່ເມື່ອໂຢເຊັບຍັງຄິດໃນເລື່ອງນີ້ຢູ່, ກໍມີເທວະດາຕົນຫນຶ່ງຂອງພຣະຜູ້ເປັນເຈົ້າໄດ້ມາປະກົດແກ່ໂຢເຊັບໃນຄວາມຝັນ, ກ່າວວ່າ "ໂຢເຊັບ,
ບຸດດາວິດເອີຍ, ຢ່າຊູ່ຢ້ານທີ່ຈະຮັບນາງມາຣີອາມາເປັນເມັຽຂອງເຈົ້າ,
ເພາະວ່າຜູ້ຊຶ່ງປະຕິສົນທິໃນທ້ອງຂອງນາງກໍເປັນໂດຍຣິດເດດພຣະວິນຍານບໍຣິສຸດເຈົ້າ.[21]ນາງຈະໃຫ້ກຳເນີດລູກຊາຍ, ແລະ
ເຈົ້າຈົ່ງເອີ້ນຊື່ເພິ່ນວ່າ 'ເຢຊູ' ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ.
[22]ສິ່ງທັງປວງນີ້ເກີດຂຶ້ນເພື່ອຈະໃຫ້ສຳເລັດ ຕາມພຣະຄັມຂອງພຣະເຈົ້າໄດ້ຊົງກ່າວໄວ້ໂດຍຜູ້ປະກາດພຣະທັມ, ກ່າວວ່າ,[23]"ເບິ່ງແມ,
ຍິງພົມມະຈາຣີຄົນຫນຶ່ງຈະຖືພາ ແລະ ຈະປະສູດລູກຊາຍຄົນຫນຶ່ງ, ແລະ ເຂົາຈະເອີ້ນຊື່ລູກນັ້ນວ່າ "ເອມານູເອນ" - ເຊິ່ງມີຄວາມໝາຍວ່າ,
"ພຣະເຈົ້າຊົງສະຖິດຢູ່ກັບພວກເຮົາ".
[24]ເມື່ອໂຢເຊັບຕື່ນຂຶ້ນ ແລະ ກໍໄດ້ເຮັດຕາມຄຳທີ່ທູດສະຫວັນຂອງພຣະຜູ້ເປັນເຈົ້າສັ່ງລາວ ແລະ ລາວໄດ້ຮັບເອົານາງມາຣີອາ
ມາເປັນພັນຣະຍາຂອງຕົນ.[25]ແຕ່ລາວບໍ່ໄດ້ສົມສູ່ຢູ່ກັບນາງຈົນນາງໄດ້ປະສູດບຸດຊາຍແລ້ວ. ແລ້ວໂຢເຊັບໄດ້ເອີ້ນຊື່ບຸດນັ້ນວ່າ "ເຢຊູ".


generated on Tue Jun 17 19:01:42 2025

# 2

1ຫລັງຈາກພຣະເຢຊູເຈົ້າໄດ້ຊົງປະສູດຢູ່ໃນເມືອງເບັດເລເຮັມ ໃນແຂວງຢູດາຍ ເຊິ່ງຢູ່ໃນສະໄຫມຂອງກະສັດເຮໂຣດ,
ກໍມີພວກໂຫຣາຈານຈາກທິດຕາເວັນອອກມາຍັງນະຄອນເຢຣູຊາເລັມ, ຖາມວ່າ, 2"ກຸມມານຜູ້ເກີດມາເປັນກະສັດຂອງຄົນຊາດຢິວນັ້ນຢູ່ທີ່ໃດ?
ພວກເຮົາໄດ້ເຫັນດາວຂອງເພິ່ນປະກົດຂຶ້ນໃນທິດຕາເວັນອອກ ແລະ ຈຶ່ງມາເພື່ອຈະຂາບໄຫວ້ເພິ່ນ." 3ເມື່ອກະສັດເຮໂຣດໄດ້ຍິນດັ່ງນີ້,
ກໍວຸ້ນວາຍໃຈ, ແລະ ທຸກຄົນໃນນະຄອນເຢຣູຊາເລັມກໍວຸ້ນວາຍເຊັ່ນກັນ.

4ກະສັດເຮໂຣດໄດ້ນຳເອົາຫົວຫນ້າປະໂລຫິດທັງຫມົດ ແລະ ພວກນັກທັມຂອງປະຊາຊົນ, ແລະ ກະສັດຈຶ່ງໄດ້ຖາມພວກເຂົາວ່າ,
"ຜູ້ເປັນພຣະຄຣິດນັ້ນຈະບັງເກີດຢູ່ທີ່ໃດ?." 5ພວກເຂົາໄດ້ຕອບວ່າ, "ໃນເມືອງເບັດເລເຮັມແຂວງຢູດາຍ,
ເພາະຜູ້ປະກາດພຣະທັມໄດ້ຂຽນໄວ້ດັ່ງນີ້, 6"ແຕ່ທ່ານ, ເມືອງເບັດເລເຮັມ, ໃນແຜ່ນດິນຢູດາຍ, ທ່ານກໍບໍ່ແມ່ນຜູ້ເລັກນ້ອຍທີ່ສຸດ
ໃນຖ່າມກາງພວກເຈົ້ານາຍຂອງຢູດາຍ, ເພາະວ່າຈາກທ່ານ ເຈົ້ານາຍຜູ້ຫນຶ່ງຈະອອກມາ ຜູ້ຊຶ່ງຈະປົກຄອງອິສະຣາເອນໄພ່ພົນຂອງເຮົາ."
7ແລ້ວເຮໂຣດໄດ້ເອີ້ນພວກໂຫຣາຈານເຂົ້າມາຫາເປັນການລັບ ເພື່ອຖາມພວກເຂົາຢ່າງຖີ່ວນຖີ່ເຖິງເວລາທີ່ດາວນັ້ນໄດ້ປະກົດຂຶ້ນ.
8ແລ້ວກະສັດໄດ້ສົ່ງພວກໂຫຣາຈານໄປຍັງເບັດເລເຮັມ, ສັ່ງວ່າ, "ຈົ່ງໄປ, ແລະ ຄົ້ນຫາກຸມມານນັ້ນຢ່າງຄັກແນ່. ເມື່ອພົບແລ້ວ,
ຈົ່ງກັບມາບອກເຮົາເພື່ອເຮົາຈະໄດ້ໄປຂາບໄຫວ້ທ່ານເຫມືອນກັນ."
9ຫລັງຈາກພວກໂຫຣາຈານໄດ້ຍິນຄຳສັ່ງຂອງກະສັດດັ່ງນີ້ແລ້ວ, ພວກເຂົາກໍພາກັນອອກໄປ, ແລະ
ດາວທີ່ປາກົດແກ່ພວກເຂົາໃນພາກຕາເວັນອອກນັ້ນກໍໄດ້ນຳຫນ້າເຂົາໄປ ແລະ ຈົນມາຢຸດຢູ່ບ່ອນສະຖານທີ່ກຸມມານຢູ່ນັ້ນ.
10ເມື່ອພວກໂຫຣາຈານໄດ້ເຫັນດາວນັ້ນ, ພວກເຂົາກໍມີຄວາມຊົມຊື່ນຍິນດີອັນໃຫຍ່.
11ພວກເຂົາຈຶ່ງເຂົ້າໄປໃນເຮືອນ ແລະ ກໍໄດ້ພົບກຸມມານນ້ອຍກັບນາງມາຣີອາມານດາຂອງພຣະອົງ. ພວກເຂົາຈຶ່ງກົ້ມລົງຂາບໄຫວ້ ແລະ
ນະມັດສະການກຸມມານນັ້ນ. ພວກເຂົາໄດ້ໄຂຫີບເອົາຊັບສົມບັດຂອງເຂົາອອກມາ ແລະ ຖວາຍແກ່ກຸມມານຄື ຄຳ, ກຳຍານ, ແລະ
ຢາງໄມ້ຫອມ. 12ພຣະເຈົ້າຊົງເຕືອນພວກເຂົາທາງຄວາມຝັນ ບໍ່ໃຫ້ກັບໄປຫາເຮໂຣດອີກ,
ດັ່ງນັ້ນພວກເຂົາຈຶ່ງກັບໄປຍັງເມືອງຂອງຕົນໂດຍທາງອື່ນ.
13ພາຍຫລັງທີ່ພວກເຂົາກັບໄປແລ້ວ, ມີທູດສະຫວັນຕົນຫນຶ່ງຂອງພຣະຜູ້ເປັນເຈົ້າໄດ້ມາປະກົດແກ່ໂຢເຊັບທາງຄວາມຝັນ ແລະ ກ່າວວ່າ,
"ຈົ່ງລຸກຂຶ້ນ, ພາກຸມມານ ແລະ ມານດາຂອງພຣະອົງ, ຫນີໄປທີ່ປະເທດເອຢິບ. ແລ້ວຈົ່ງຢູ່ທີ່ນັ້ນຈົນກວ່າເຮົາຈະບອກເຈົ້າ,
ເພາະວ່າເຮໂຣດຈະຊອກຫາກຸມມານເພື່ອຈະຂ້າເພິ່ນເສັຽ." 14ໃນຄືນນັ້ນເອງ ໂຢເຊັບໄດ້ລຸກຂຶ້ນ ແລະ ພາກຸມມານ ແລະ ມານດາຂອງພຣະອົງ
ອອກເດີນທາງໄປຍັງປະເທດເອຢິບ. 15ແລະ ໄດ້ຢູ່ທີ່ນັ້ນຈົນເຮໂຣດຕາຍໄປ. ແລ້ວສິ່ງທີ່ເກີດຂຶ້ນດັ່ງນີ້ກໍເພື່ອຈະໃຫ້ສຳເລັດ
ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງກ່າວໄວ້ໂດຍຜູ້ປະກາດພຣະທັມວ່າ, "ເຮົາໄດ້ເອີ້ນບຸດຊາຍຂອງເຮົາອອກມາຈາກປະເທດເອຢິບ."
16ຈາກນັ້ນເຮໂຣດ, ເມື່ອເຫັນວ່າຕົນໄດ້ຫລົງກົນພວກໂຫຣາຈານ, ກໍໃຈຮ້າຍຫລາຍ.
ຈຶ່ງໃຊ້ຄົນໄປຂ້າເດັກນ້ອຍຜູ້ຊາຍທັງຫມົດຕັ້ງແຕ່ອາຍຸສອງປີລົງມາ ໃນເມືອງເບັດເລເຮັມ ແລະ ສະຖານທີ່ໃກ້ຄຽງ,
ໂດຍນັບຈາກເວລາທີ່ກະສັດຮັບຊາບຈາກພວກໂຫຣາຈານນັ້ນ.
17ແລ້ວກໍສຳເລັດຕາມທີ່ຊົງກ່າວໄວ້ໂດຍຜ່ານເຢເຣມີຢາ ຜູ້ປະກາດພຣະທັມວ່າ, 18"ໄດ້ຍິນສຽງດັ່ງໃນບ້ານຣາມາ, ເປັນສຽງຮ້ອງໄຫ້ ແລະ
ສຽງຮ້ອງຄວນຄາງຄັ່ງໃຫຍ່, ນາງຣາເຊັນຮ້ອງໄຫ້ນຳລູກຂອງຕົນ, ແລະ ນາງບໍ່ຮັບຟັງຄວາມເລົ້າໂລມເພາະລູກເຂົາຕາຍແລ້ວ."
19ເມື່ອເຮໂຣດໄດ້ຕາຍ, ເບິ່ງແມ, ມີທູດສະຫວັນຕົນຫນຶ່ງຂອງພຣະຜູ້ເປັນເຈົ້າມາປະກົດແກ່ໂຢເຊັບ ທາງຄວາມຝັນໃນປະເທດເອຢິບ ແລະ
ສັ່ງວ່າ, 20"ຈົ່ງລຸກຂຶ້ນ ແລະ ພາກຸມມານກັບມານດາຂອງພຣະອົງກັບຄືນໄປແຜ່ນດິນອິສະຣາເອນ,
ເພາະຜູ້ທີ່ຊອກຫາຈະປະຫານຊີວິດກຸມມານນັ້ນຕາຍແລ້ວ." 21ໂຢເຊັບຈຶ່ງລຸກຂຶ້ນ, ແລະ ພາກຸມມານກັບມານດາມາຂອງພຣະອົງ, ແລະ
ມາຍັງແຜ່ນດິນອິສະຣາເອນ.
22ແຕ່ເມື່ອໄດ້ຍິນຂ່າວວ່າ ອາກເຄລາວ ໄດ້ຂຶ້ນປົກຄອງແຂວງຢູດາຍແທນເຮໂຣດຜູ້ເປັນບິດາ, ໂຢເຊັບກໍຢ້ານບໍ່ກ້າໄປທີ່ນັ້ນ.
ຫລັງຈາກໄດ້ຮັບຄຳເຕືອນຈາກພຣະເຈົ້າທາງຄວາມຝັນ, ໂຢເຊັບກໍເລີຍໄປຍັງແຂວງຄາລິເລ 23ແລະ ໄປອາໃສຢູ່ເມືອງໜຶ່ງຊື່ນາຊາເຣັດ. ສິ່ງນີ້
ເພື່ອຈະສຳເລັດຕາມທີ່ຊົງກ່າວໄວ້ໂດຍຜ່ານຜູ້ປະກາດພຣະທັມວ່າ, ທ່ານຈະຖືກເອີ້ນວ່າ 'ໄທນາຊາເຣັດ'.


generated on Tue Jun 17 19:01:42 2025

3 [1]ໃນຄາວນັ້ນໂຢຮັນບັບຕິສະໂຕໄດ້ມາປະກາດໃນປ່າຖິ່ນທຸຣະກັນດານແຂວງຢູດາຍວ່າ,[2]ຈົ່ງຖິ້ມໃຈເກົ່າ, ແລ້ວເອົາໃຈໃຫມ່ ແລະ
ເຊົາເຮັດບາບເພາະວ່າຣາຊະອານາຈັກສະຫວັນໄດ້ມາໃກ້ແລ້ວ."[3]ເພາະນີ້ແມ່ນໂຢຮັນຜູ້ທີ່ເອຊາຢາ ຜູ້ປະກາດພຣະທັມ, ໄດ້ກ່າວໄວ້,
"ມີສຽງປ່າວໄປໃນປ່າຖິ່ນແຫ້ງແລ້ງກັນດານວ່າ, 'ຈົ່ງຈັດແຈ່ງທາງແຫ່ງພຣະຜູ້ເປັນເຈົ້າ, ຈົ່ງເຮັດຫົນທາງຂອງພຣະອົງໃຫ້ຊື່ໄປ.'"

[4]ເວລານີ້ໂຢຮັນໄດ້ນຸ່ງເສື້ອຜ້າເຮັດດ້ວຍຂົນອູດ ແລະ ໃຊ້ສາຍຫນັງຮັດແອວ. ອາຫານຂອງເພິ່ນແມ່ນ ຕັກແຕນ ແລະ ນ້ຳເຜີ້ງປ່າ.
[5]ຂະນະນັ້ນຄົນນະຄອນເຢຣູຊາເລັມ, ຄົນທົ່ວແຂວງຢູດາຍ, ແລະ ຄົນທັງປວງທີ່ຢູ່ຕາມລຳນ້ຳຈໍແດນກໍອອກໄປຫາໂຢຮັນ.[6]ແລະ
ໂຢຮັນກໍໃຫ້ພວກເຂົາຮັບບັບຕິສະມາໃນແມ່ນ້ຳຈໍແດນ, ພວກເຂົາໄດ້ສາຣະພາບຄວາມຜິດບາບຂອງຕົນ.
[7]ແຕ່ເມື່ອໂຢຮັນເຫັນພວກຟາຣີຊາຍ ແລະ ພວກຊາດູກາຍ ຫລາຍຄົນພາກັນມາເພື່ອຈະຮັບບັບຕິສະມາ, ເພິ່ນຈຶ່ງກ່າວແກ່ເຂົາວ່າ,
"ພວກລູກຫລານງູພິດ, ໃຜໄດ້ບອກສູໃຫ້ປົບຫນີຈາກພຣະພິໂຣດທີ່ກຳລັງຈະມາເຖິງນັ້ນ?
[8]ເຫດສັນນັ້ນຈົ່ງປະຕິບັດໃຫ້ໄດ້ຜົນສົມກັບການທີ່ພວກທ່ານໄດ້ຖິ້ມໃຈເກົ່າເອົາໃຈໃຫມ່.[9]ແລະ ຢ່າຕັ້ງນຶກໃນໃຈວ່າ
'ພວກເຮົາມີອັບຣາຮາມເປັນພໍ່ຂອງພວກເຮົາ' ເພາະເຮົາບອກພວກເຈົ້າວ່າ
ພຣະເຈົ້າຊົງສາມາດຈະບັນດານໃຫ້ກ້ອນຫີນເຫລົ່ານີ້ເປັນລູກຫລານຂອງອັບຣາຮາມກໍໄດ້.
[10]ຂວານວາງໄວ້ທີ່ເຫງົ້າຕົ້ນໄມ້ແລ້ວ. ສະນັ້ນໄມ້ທຸກຕົ້ນທີ່ບໍ່ເກີດຜົນດີຈະຖືກປ້ຳ ແລ້ວໂຍນຖິ້ມໃສ່ໄຟເສັຽ.
[11]ຂ້າພຣະເຈົ້າໃຫ້ພວກເຈົ້າຮັບບັບຕິສະມາດ້ວຍນ້ຳ ສຳລັບການກັບໃຈ. ແຕ່ຜູ້ທີ່ຈະມາພາຍຫລັງຂ້າພຣະເຈົ້າກໍມີຣິດເດດກວ່າຂ້າພຣະເຈົ້າອີກ,
ຊຶ່ງຂ້າພຣະເຈົ້າບໍ່ສົມຄວນຈະຈັບແມ່ນແຕ່ເກີບຂອງເພິ່ນ. ຝ່າຍຜູ້ນັ້ນຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ
ດ້ວຍໄຟ.[12]ມືຂອງຜູ້ນັ້ນຖືດົ້ງຟັດເຂົ້າ ເພິ່ນຈະເຮັດລານນວດເຂົ້າຂອງຕົນໃຫ້ກ້ຽງດີ ແລະ ຈະຮວບຮວມເຂົ້າເມັດດີຂອງຕົນມາໃສ່ໄວ້ໃນເລົ້າ
ແຕ່ເຂົ້າລີບນັ້ນ ເພິ່ນຈະເຜົາເສັຽດ້ວຍໄຟທີ່ບໍ່ຮູ້ມອດ."
[13]ແລ້ວພຣະເຢຊູໄດ້ສະເດັດຈາກແຂວງຄາລີເລຈົນມາເຖິງແມ່ນ້ຳຈໍແດນເພື່ອຈະຮັບບັບຕິສະມາຈາກໂຢຮັນ.
[14]ແຕ່ໂຢຮັນໄດ້ພະຍາຍາມຫ້າມພຣະອົງ, ກ່າວວ່າ, "ຂ້ານ້ອຍຕ້ອງການຈະຮັບບັບຕິສະມາໂດຍທ່ານ, ແລະ
ທ່ານຈະມາຫາຂ້ານ້ອຍແນວໃດ?"[15]ພຣະເຢຊູໄດ້ຊົງຕອບໂຢຮັນວ່າ, "ບັດນີ້ຈົ່ງຍອມໃຫ້ເປັນໄປຢ່າງນີ້ສາ,
ເພາະສົມຄວນທີ່ເຮົາຈະເຮັດຢ່າງນີ້ໃຫ້ຖືກກັບຄວາມຊອບທັມທຸກປະການ" ແລ້ວໂຢຮັນກໍຍອມ.
[16]ພາຍຫລັງພຣະອົງຊົງຮັບບັບຕິສະມາແລ້ວ, ພຣະເຢຊູເຈົ້າກໍສະເດັດຂຶ້ນຈາກນ້ຳທັນທີ, ແລ້ວເບິ່ງແມ, ທ້ອງຟ້າກໍໄຂອອກ ແກ່ພຣະອົງ.
ພຣະອົງຊົງເຫັນພຣະວິນຍານຂອງພຣະເຈົ້າສະເດັດລົງມາເຫມືອນດັ່ງນົກເຂົາ ແລະ ມາສະຖິດຢູ່ເທິງພຣະອົງ.[17]ເບິ່ງແມ,
ມີພຣະສຸຣະສຽງຈາກຟ້າສະຫວັນຊົງກ່າວວ່າ, "ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ. ເຮົາຊອບໃຈໃນຕົວທ່ານຫລາຍ."


generated on Tue Jun 17 19:01:42 2025

# 4

1ຈາກນັ້ນພຣະວິນຍານໄດ້ຊົງພາພຣະເຢຊູເຈົ້າເຂົ້າໄປໃນປ່າ ເພື່ອມານຮ້າຍຈະໄດ້ທົດລອງພຣະອົງ.
2ເມື່ອພຣະອົງຊົງອົດອາຫານເປັນເວລາສີ່ສິບວັນສີ່ສິບຄືນແລ້ວພຣະອົງກໍຊົງຢາກອາຫານ. 3ຜູ້ທົດລອງມາຫາພຣະອົງທູນວ່າ,
"ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງສັ່ງກ້ອນຫີນເຫລົ່ານີ້ໃຫ້ກາຍເປັນອາຫານ." 4ແຕ່ພຣະເຢຊູເຈົ້າຊົງຕອບວ່າ,
"ມີຄຳຂຽນໄວ້ໃນພຣະຄັມພີວ່າ 'ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານພຽງສິ່ງດຽວ
ແຕ່ລ້ຽງດ້ວຍຖ້ອຍຄຳທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ'."

5ແລ້ວມານຮ້າຍໄດ້ນຳພຣະເຢຊູເຈົ້າໄປຍັງນະຄອນອັນສັກສິດ ແລະ ໃຫ້ພຣະອົງປະທັບຢູ່ເທິງຈຸດສູງສຸດຂອງພຣະວິຫານ.
6ແລ້ວໄດ້ທູນຕໍ່ພຣະອົງວ່າ, "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ, ຈົ່ງໂຕນລົງເບິ່ງດູ ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ,
'ພຣະເຈົ້າຈະຊົງຮັບສັ່ງພວກທູດສະຫວັນເຝົ້າເບິ່ງແຍງປົກປ້ອງທ່ານ ແລະ
'ມືຂອງທູດສະຫວັນເຫລົ່ານັ້ນຈະຮັບທ່ານໄວ້ຢ້ານວ່າຕີນຂອງທ່ານຈະຕຳຫີນ'."
7"ແລະມີຄຳຂຽນໄວ້ໃນພຣະຄັມພີອີກວ່າ,
'ຢ່າທົດລອງພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າ'." 8ອີກເທື່ອຫນຶ່ງມານຮ້າຍໄດ້ພາພຣະອົງຂຶ້ນເມືອເທິງພູສູງ
ແລະໄດ້ສະແດງບັນດາອານາຈັກແຫ່ງໂລກນີ້ກັບຄວາມຍິ່ງໃຫຍ່ທັງຫມົດໃຫ້ພຣະອົງເຫັນ. 9ແລ້ວໄດ້ທູນຕໍ່ພຣະອົງວ່າ,
"ເຮົາຈະເອົາສິ່ງເຫລົ່ານີ້ໃຫ້ແກ່ທ່ານ ຖ້າທ່ານຈະກົ້ມກາບ ແລະ ນະມັດສະການເຮົາ."
10ຈາກນັ້ນພຣະເຢຊູເຈົ້າຊົງຕອບມັນວ່າ, "ຊາຕານເອີຍ, ຈົ່ງຫນີໄປເສັຽ ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ,
'ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າ ແລະ ຮັບໃຊ້ພຣະອົງແຕ່ຜູ້ດຽວ'." 11ແລ້ວມານຮ້າຍຈຶ່ງຫນີຈາກພຣະອົງໄປ ແລະ ເບິ່ງແມ,
ມີພວກທູດສະຫວັນມາປະຕິບັດຮັບໃຊ້ພຣະອົງ.
12ບັດນີ້ ເມື່ອພຣະເຢຊູເຈົ້າໄດ້ຍິນວ່າໂຢຮັນຖືກຈັບໄວ້ແລ້ວ ພຣະອົງກໍສະເດັດອອກໄປຍັງແຂວງຄາລີເລ. 13ພຣະອົງອອກຈາກເມືອງນາຊາເຣັດ
ແລ້ວໄປອາໃສຢູ່ເມືອງກາເປນາອູມ ຊຶ່ງຢູ່ຕິດແຄມທະເລສາບຄາລີເລ, ໃນເຂດແດນເຊບູລູນ ແລະ ນັບທາລີ.
14ສິ່ງນີ້ເປັນໄປຕາມທີ່ຊົງກ່າວໄວ້ດ້ວຍເອຊາຢາຜູ້ປະກາດພຣະທັມຈະໄດ້ສຳເລັດຄື. 15"ແຂວງເຊບູລູນ ແລະ ແຂວງເນັບທາລີ,
ຕາມທາງທະເລຟາກແມ່ນ້ຳຈໍແດນພຸ້ນ ຄືແຂວງຄາລີເລຂອງບັນດາຄົນຕ່າງຊາດ! 16ພົນລະເມືອງຜູ້ນັ່ງຢູ່ໃນຄວາມມືດ
ໄດ້ເຫັນຄວາມສະຫວ່າງອັນໃຫຍ່ ແລະສຳລັບຜູ້ທີ່ນັ່ງຢູ່ໃນແດນແລະເງົາແຫ່ງຄວາມຕາຍ ກໍມີແສງສະຫວ່າງສ່ອງຂຶ້ນເທິງພວກເຂົາແລ້ວ."
17ຕັ້ງແຕ່ນັ້ນມາພຣະເຢຊູເຈົ້າຊົງຕັ້ງຕົ້ນປ່າວປະກາດວ່າ, "ຈົ່ງກັບໃຈໃຫມ່ເພາະຣາຊະອານາຈັກສະຫວັນໄດ້ມາໃກ້ແລ້ວ."
18ຂະນະທີ່ພຣະເຢຊູເຈົ້າສະເດັດລຽບຕາມແຄມທະເລສາບຄາລີເລ, ກໍຊົງທອດພຣະເນດເຫັນອ້າຍນ້ອງສອງຄົນ
ຄືຊີໂມນທີ່ເອີ້ນວ່າເປໂຕກັບອັນເດອານ້ອງຊາຍ ກຳລັງຖິ້ມມອງລົງນ້ຳທະເລເພາະພວກເຂົາເປັນຄົນຫາປາ. 19ພຣະເຢຊູຊົງກ່າວກັບເຂົາວ່າ, "ມາ,
ຈົ່ງຕາມເຮົາມາ ແລະ ເຮົາຈະບັນດານໃຫ້ພວກເຈົ້າເປັນຜູ້ຫາຄົນ" 20ໃນທັນໃດນັ້ນພວກເຂົາກໍປະມອງແລ້ວຕິດຕາມພຣະອົງໄປ.
21ຂະນະທີ່ພຣະເຢຊູເຈົ້າກຳລັງສະເດັດຕໍ່ໄປຈາກທີ່ນັ້ນ ກໍແນມເຫັນອ້າຍນ້ອງອີກສອງຄົນ ຄືຢາໂກໂບລູກເຊເບດາຍ, ແລະ
ກັບໂຢຮັນຜູ້ເປັນນ້ອງຊາຍ ກຳລັງແປງມອງຢູ່ໃນເຮືອກັບເຊເບດາຍພໍ່ຂອງເຂົາ. ພຣະອົງໄດ້ຊົງເອີ້ນເອົາເຂົາ, 22ແລະ
ໃນທັນໃດນັ້ນເຂົາທັງສອງກໍປະເຮືອ ແລະ ລາພໍ່ຂອງເຂົາຕາມພຣະອົງໄປ.
23ພຣະເຢຊູເຈົ້າໄດ້ສະເດັດໄປທົ່ວແຂວງຄາລີເລ, ຊົງສັ່ງສອນໃນໂຮງທັມະສາລາຂອງເຂົາ,
ຊົງປະກາດຂ່າວປະເສີດເລື່ອງຣາຊະອານາຈັກສະຫວັນ, ແລະ ຊົງໂຜດພົນລະເມືອງທີ່ເຈັບໄຂ້ໄດ້ພະຍາດທຸກຢ່າງໃຫ້ດີຫມົດ.
24ຊື່ສຽງຂອງພຣະອົງກໍຊ່າລືໄປທົ່ວປະເທດຊີເຣັຽ, ແລະ ຜູ້ຄົນຈຶ່ງພາຄົນປ່ວຍໄຂ້ໄດ້ພະຍາດຕ່າງໆ, ຄົນທີ່ທົນທຸກທໍຣະມານ, ຄົນທີ່ຜີເຂົ້າສິງ,
ຄົນເປັນບ້າຫມູ ແລະ ຄົນເປັນເປ້ຽມາຫາພຣະອົງ. ພຣະອົງກໍຊົງໂຜດໃຫ້ເຂົາດີທຸກຄົນ. 25ມີຄົນຫມູ່ໃຫຍ່ມາຈາກແຂວງຄາລີເລ,
ຈາກແຂວງເດກາໂປລີ, ຈາກກຸງເຢຣູຊາເລັມ ແລະ ຢູດາຍ ແລະ ຈາກອີກຟາກຂອງແມ່ນ້ຳຈໍແດນຕ່າງກໍໄດ້ຕິດຕາມພຣະອົງໄປ.

 generated on Tue Jun 17 19:01:42 2025

# 5

1ເມື່ອທອດພຣະເນດເຫັນຄົນຫລວງຫລາຍ ພຣະອົງກໍສະເດັດຂຶ້ນເທິງພູເມື່ອປະທັບລົງແລ້ວ ພວກສາວົກກໍເຂົ້າມາຫາພຣະອົງ.2ພຣະອົງຈຶ່ງຊົງ
ຕັ້ງຕົ້ນສັ່ງສອນພວກເຂົາວ່າ,3“ພຣະພອນເປັນຂອງຜູ້ໃດທີ່ຍາກຈົນໃນຈິດວິນຍານ, ເພາະວ່າອານາຈັກສະຫວັນເປັນຂອງຜູ້ນັ້ນ.
4ພຣະພອນເປັນຂອງຜູ້ໃດທີ່ໂສກເສົ້າເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ.

5ພຣະພອນເປັນຂອງຜູ້ໃດທີ່ມີຈິດໃຈອ່ອນຫວານ, ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນໂລກເປັນມໍຣະດົກ.
6ພຣະພອນເປັນຂອງຜູ້ໃດທີ່ມີຄວາມອຶດຫິວ ແລະ ກະຫາຍຄວາມຊອບທັມ, ເພາະວ່າພຣະເຈົ້າຈະຊົງໃຫ້ອີ່ມບໍຣິບູນ.
7ພຣະພອນເປັນຂອງຜູ້ໃດທີ່ມີໃຈກະຣຸນາກໍເປັນສຸກ, ເພາະວ່າຜູ້ນັ້ນຈະໄດ້ຮັບພຣະກະຣຸນາຕອບ.
8ພຣະພອນເປັນຂອງຜູ້ໃດທີ່ມີໃຈສະອາດບໍຣິສຸດ, ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ.
9ພຣະພອນເປັນຂອງຜູ້ໃດທີ່ສ້າງຄວາມສະຫງົບສຸກ, ເພາະພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດຂອງພຣະອົງ.10ພຣະພອນເປັນຂອງຜູ້ໃດທີ່
ຖືກຂົ່ມເຫັງເພາະເຫັນແກ່ຄວາມຊອບທັມ, ເພາະວ່າອານາຈັກສະຫວັນເປັນຂອງຜູ້ນັ້ນ.
11ພຣະພອນກໍເປັນຂອງພວກເຈົ້າ ເມື່ອຄົນກ່າວຂວັນນິນທາ ແລະ ຂົ່ມເຫັງເຈົ້າທັງຫລາຍ, ແລະ ຖືກກ່າວຫາຄວາມບໍ່ຈິງທຸກຢ່າງຕໍ່ພວກເຈົ້າ
ເພາະເຫັນແກ່ເຮົາ.12ຈົ່ງຊົມຊື່ນຍິນດີ ເພາະວ່າບໍາເຫນັດຂອງທ່ານທັງຫລາຍມີບໍຣິບູນໃນສະຫວັນ. ເຫມືອນດັ່ງນັ້ນແຫລະ,
ເພາະເຂົາໄດ້ຂົ່ມເຫັງຜູ້ປະກາດພຣະທັມທີ່ຢູ່ກ່ອນທ່ານທັງຫລາຍ.
13ທ່ານທັງຫລາຍເປັນເກືອສໍາລັບໂລກ ແຕ່ຖ້າເກືອນັ້ນຈືດຈາງໄປແລ້ວ ຈະເຮັດໃຫ້ກັບເຄັມອີກໄດ້ຢ່າງໃດ? ແຕ່ນັ້ນໄປກໍບໍ່ມີປະໂຫຍດອັນໃດ
ນອກຈາກຈະມີແຕ່ຈະຖິ້ມເສັຽໃຫ້ຄົນຢຽບຢໍ່າເທົ່ານັ້ນ.14ພວກທ່ານເປັນແສງສະຫວ່າງສໍາລັບໂລກ ເມືອງທີ່ຕັ້ງຢູ່ເທິງພູຈະບັງລັບໄວ້ບໍ່ໄດ້.
15ບໍ່ຫ່ອນມີຜູ້ໃດເມື່ອໄຕ້ຕະກຽງແລ້ວເອົາບຸງມາກວມ ແຕ່ຈະຕັ້ງມັນໄວ້ເທິງຮອງຕີນໂຄມ ເພື່ອໃຫ້ມັນສ່ອງແຈ້ງໄປທົ່ວທຸກຄົນທີ່ຢູ່ໃນເຮືອນນັ້ນ.
16ຈົ່ງໃຫ້ແສງສະຫວ່າງຂອງທ່ານສ່ອງແຈ້ງແກ່ຄົນທັງປວງ ໃນວິທີການທີ່ພວກເຂົາຈະເຫັນການດີທີ່ພວກທ່ານເຮັດ ແລະ
ສັນຣະເສີນພຣະບິດາເຈົ້າຂອງພວກທ່ານຜູ້ຊົງສະຖິດຢູ່ໃນສະຫວັນ.
17ຢ່າຄຶດວ່າເຮົາມາລຶບລ້າງພຣະບັນຍັດ ແລະ ຖ້ອຍຄໍາຂອງຜູ້ປະກາດພຣະທັມເສັຽແຕ່ຢ່າງໃດ. ເຮົາບໍ່ໄດ້ມາລຶບລ້າງ
ແຕ່ມາເຮັດໃຫ້ສໍາເລັດຄົບຖ້ວນ.18ເຮົາບອກທ່ານທັງຫລາຍຄວາມຈິງວ່າ ແມ່ນແຕ່ຟ້າສະຫວັນ ແລະ ແຜ່ນດິນໂລກຈະລ່ວງໄປ, ແຕ່ພຽງແຕ່ຈຸດ
ຫລື ຂີດດຽວ ກໍຈະບໍ່ສູນຫາຍໄປຈາກພຣະບັນຍັດ, ຈົນກວ່າສິ່ງທັງປວງນັ້ນຈະສໍາເລັດສົມບູນ.
19ດ້ວຍເຫດນີ້ ຫາກຜູ້ໃດໄດ້ເຮັດໃຫ້ຂໍ້ເລັກນ້ອຍທີ່ສຸດໃນບັນດາຄໍາສັ່ງນີ້ພຽງຂໍ້ດຽວ ແລະ ທັງສອນຄົນອື່ນໃຫ້ເຮັດຢ່າງນັ້ນດ້ວຍ
ຜູ້ນັ້ນຈະຖືກເອີ້ນວ່າຜູ້ນ້ອຍທີ່ສຸດໃນອານາຈັກສະຫວັນ. ແຕ່ຜູ້ໃດທີ່ປະຕິບັດ ແລະ ສອນຕາມພຣະບັນຍັດ
ຜູ້ນັ້ນຈະຖືກເອີ້ນວ່າຜູ້ໃຫຍ່ໃນອານາຈັກສະຫວັນ.20ເພາະເຮົາບອກທ່ານທັງຫລາຍວ່າ
ຖ້າການຖືສິລະທັມຂອງທ່ານບໍ່ລື່ນກວ່າການຖືສິລະທັມຂອງພວກນັກທັມ ແລະ ພວກຟາຣີຊາຍແລ້ວ
ພວກທ່ານຈະເຂົ້າໄປໃນອານາຈັກສະຫວັນບໍ່ໄດ້ເລີຍ.
21ທ່ານທັງຫລາຍເຄີຍໄດ້ຍິນຄໍາທີ່ກ່າວໄວ້ແລ້ວແກ່ຄົນບູຮານວ່າ 'ຢ່າຂ້າຄົນ' ແລະ 'ຖ້າຜູ້ໃດຂ້າຄົນ ຜູ້ນັ້ນຈະຕ້ອງຖືກພິພາກສາລົງໂທດ’.
22ແຕ່ຝ່າຍເຮົາ ຂໍບອກທ່ານວ່າ ຜູ້ໃດຮ້າຍອ້າຍນ້ອງຂອງຕົນ ຜູ້ນັ້ນຈະຕ້ອງຖືກໂທດຢ່າງຫນັກ; ແລະຜູ້ໃດຈະເວົ້າແກ່ອ້າຍນ້ອງຂອງຕົນວ່າ
‘ເຈົ້າບໍ່ມີຄ່າ’ ຜູ້ນັ້ນຈະຖືກພິພາກສາລົງໂທດຈາກສານສູງ; ແລະ ຜູ້ໃດຈະເວົ້າວ່າ ‘ເຈົ້າໂງ່ຈ້າ’ ຜູ້ນັ້ນຈະມີໂທດໃນບຶງໄຟນະລົກ.
23ດ້ວຍເຫດນີ້, ຖ້າທ່ານກໍາລັງນໍາເຄື່ອງຖວາຍມາເຖິງແທ່ນບູຊາ ແລ້ວຣະນຶກຂຶ້ນໄດ້ວ່າ
ທ່ານມີຂໍ້ຂຸ້ນເຄືອງກັບອ້າຍນ້ອງຂອງຕົນດ້ວຍເລື່ອງໃດເລື່ອງຫນຶ່ງ.24ຈົ່ງວາງເຄື່ອງບູຊາໄວ້ຕໍ່ຫນ້າແທ່ນນັ້ນ
ກັບໄປຄືນດີກັບອ້າຍນ້ອງຜູ້ນັ້ນເສັຽກ່ອນ ແລ້ວຈຶ່ງມາຖວາຍເຄື່ອງບູຊາຂອງທ່ານ.
25ໃນຂະນະທີ່ທ່ານກໍາລັງໄປຂຶ້ນສານກັບລາວ ຢ້ານວ່າໂຈດນັ້ນຈະມອບທ່ານໄວ້ກັບຕຸລາການ ແລະ
ຕຸລາການຈະມອບທ່ານໄວ້ກັບອໍານາດເຈົ້າຫນ້າທີ່ ແລະ ທ່ານຈະໄດ້ຖືກຂັງໄວ້ໃນຄຸກ.26ເຮົາບອກແກ່ທ່ານຕາມຄວາມຈິງວ່າ
ທ່ານຈະອອກຈາກທີ່ນັ້ນບໍ່ໄດ້ຈົນກວ່າຈະໄດ້ໃຊ້ຫນີ້ຈົນຄົບທຸກອັດກ່ອນ.
27ທ່ານເຄີຍໄດ້ຍິນຄໍາທີ່ກ່າວໄວ້ວ່າ ‘ຢ່າຫລິ້ນຊູ້ສູ່ຜົວເມັຽທ່ານ.’28ແຕ່ຝ່າຍເຮົາ ບອກທ່ານທັງຫລາຍວ່າ
ຜູ້ໃດເບິ່ງແມ່ຍິງດ້ວຍໃຈກໍາຫນັດໃນຍິງນັ້ນ ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ.
29ຖ້າຕາເບື້ອງຂວາຂອງທ່ານເປັນເຫດເຮັດໃຫ້ທ່ານເຮັດບາບ ຈົ່ງຄວັດອອກຖິ້ມເສັຽ
ເພາະການທີ່ເສັຽອະໄວຍະວະສ່ວນຫນຶ່ງກໍດີກວ່າຫມົດທັງຕົວຈະຖືກຖິ້ມລົງໃນນະຣົກ.
30ຖ້າມືເບື້ອງຂວາຂອງທ່ານເປັນເຫດເຮັດໃຫ້ທ່ານເຮັດບາບ ຈົ່ງຕັດຖິ້ມເສັຽ
ເພາະການທີ່ເສັຽອະໄວຍະວະສ່ວນຫນຶ່ງກໍດີກວ່າຫມົດທັງຕົວຈະຕ້ອງຕົກໃນນະຣົກ.
31ຍັງມີຄໍາກ່າວໄວ້ວ່າ, ‘ຖ້າຜູ້ໃດຈະປະຮ້າງເມັຽຂອງຕົນ, ກໍໃຫ້ເຮັດຫນັງສືຢ່າຮ້າງໃຫ້ເມັຽນັ້ນ’.32ແຕ່ຝ່າຍເຮົາ ບອກທ່ານທັງຫລາຍວ່າ
ຖ້າຜູ້ໃດຈະປະເມັຽຂອງຕົນ ນອກຈາກຜິດສິລະທັມທາງເພດແລ້ວ ກໍທໍກັບວ່າຜູ້ນັ້ນເຮັດໃຫ້ຍິງນັ້ນຖືກຜິດໃນຖານຫລິ້ນຊູ້
ແລ້ວຖ້າຜູ້ໃດຈະແຕ່ງງານກັບຍິງນັ້ນພາຍຫລັງ ກໍຖືກຜິດໃນຖານຫລິ້ນຊູ້ເຫມືອນກັນ.
33ອີກປະການຫນຶ່ງ, ທ່ານເຄີຍໄດ້ຍິນຄໍາທີ່ກ່າວໄວ້ແກ່ຄົນບູຮານວ່າ ‘ຢ່າສາບານດ້ວຍຄໍາສາບານບໍ່ຈິງ
ແຕ່ໃຫ້ຮັກສາຄໍາສາບານທີ່ທ່ານຖວາຍຕໍ່ອົງພຣະຜູ້ເປັນເຈົ້າ.34ແຕ່ຝ່າຍເຮົາ ບອກທ່ານທັງຫລາຍວ່າ, ຢ່າສາບານເລີຍ
ໂດຍອ້າງເຖິງສະຫວັນກໍດີ, ເພາະສະຫວັນເປັນຣາຊະບັນລັງຂອງພຣະເຈົ້າ,35ຫລື ໂດຍອ້າງເຖິງແຜ່ນດິນໂລກກໍດີ,
ເພາະແຜ່ນດິນໂລກເປັນທີ່ຮອງພຣະບາດຂອງພຣະອົງ; ຫລື ໂດຍອ້າງເຖິງນະຄອນເຢຣູຊາເລັມກໍດີ,
ເພາະນະຄອນເຢຣູຊາເລັມເປັນທີ່ປຣະທັບຂອງພຣະມະຫາກະສັດ.
36ຫລືຢ່າສາບານໂດຍອ້າງເຖິງຫົວຂອງຕົນ, ເພາະທ່ານບໍ່ສາມາດຈະເຮັດໃຫ້ຜົມຂາວ ຫລື ດໍາຈັກເສັ້ນດຽວກໍບໍ່ໄດ້.
37ແຕ່ຈົ່ງໃຫ້ຖ້ອຍຄໍາຂອງພວກທ່ານເປັນດັ່ງນີ້ ‘ແມ່ນ’ ກໍວ່າ ‘ແມ່ນ’ ‘ບໍ່ແມ່ນ’ ກໍວ່າ ‘ບໍ່ແມ່ນ’ ນອກເຫນືອໄປຈາກນັ້ນຖືວ່າມາຈາກຄວາມຊົ່ວ.


generated on Tue Jun 17 19:01:42 2025

[38]ພວກທ່ານໄດ້ຍິນຄຳທີ່ກ່າວໄວ້ວ່າ, ‘ຕາແທນຕາ ແລະ ແຂ້ວແທນແຂ້ວ’.[39]ຝ່າຍເຮົາ ບອກທ່ານທັງຫລາຍວ່າ ຢ່າຕໍ່ສູ້ກັບຄົນຊົ່ວ
ແຕ່ຖ້າຜູ້ໃດຕົບແກ້ມເບື້ອງຂວາຂອງທ່ານຈົ່ງປິ່ນແກ້ມເບື້ອງຊ້າຍໃຫ້ຜູ້ນັ້ນເຫມືອນກັນ.
[40]ຖ້າຜູ້ໃດຢາກຟ້ອງທ່ານຂຶ້ນສານ ແລະ ເອົາເສື້ອຊັ້ນໃນຂອງທ່ານໄປ, ກໍຈົ່ງໃຫ້ເສື້ອຊັ້ນນອກແກ່ເພິ່ນເຫມືອນກັນ.
[41]ຖ້າຜູ້ໃດຈະເກນທ່ານໃຫ້ຍ່າງໄປຫນຶ່ງຫລັກ, ກໍໃຫ້ທ່ານໄປກັບເພິ່ນເຖິງສອງຫລັກ.[42]ຈົ່ງໃຫ້ກັບທຸກຄົນທີ່ຂໍຈາກທ່ານ ແລະ
ຢ່າປິ່ນຫລັງໃສ່ຜູ້ທີ່ຢາກຢືມຈາກທ່ານ.
[43]ທ່ານໄດ້ຍິນຄຳທີ່ກ່າວໄວ້ວ່າ, ‘ຈົ່ງຮັກເພື່ອນບ້ານ ແລະ ຊັງສັດຕຣູ.’[44]ແຕ່ຝ່າຍເຮົາ ບອກທ່ານທັງຫລາຍວ່າ ຈົ່ງຮັກສັດຕຣູຂອງທ່ານ
ຈົ່ງອ້ອນວອນສຳລັບຜູ້ທີ່ຂົ່ມເຫັງທ່ານ,[45]ເພາະພຣະອົງຊົງບັນດານໃຫ້ດວງຕາເວັນຂຶ້ນສ່ອງສະຫວ່າງໃສ່ຄົນຊົ່ວ ແລະ ຄົນດີ ແລະ
ຊົງໃຫ້ຝົນຕົກໃສ່ຄົນສິລະທັມກັບຄົນບໍ່ມີສິລະທັມສະເຫມີກັນ.
[46]ເພາະຖ້າວ່າທ່ານຮັກຄົນທັງຫລາຍທີ່ຮັກທ່ານ ແລ້ວທ່ານຈະໄດ້ຮັບບຳເຫນັດອັນໃດ? ເຖິງພວກເກັບພາສີກໍຍັງເຮັດຢ່າງນັ້ນບໍ່ແມ່ນຫລື?
[47]ຖ້າທ່ານຄຳນັບພີ່ນ້ອງຂອງຕົນແຕ່ຝ່າຍດຽວ ແລ້ວທ່ານໄດ້ເຮັດສິ່ງໃດລື່ນຄົນອື່ນ? ແມ່ນແຕ່ຄົນຕ່າງຊາດກໍຍັງເຮັດຢ່າງນັ້ນບໍ່ແມ່ນຫລື?
[48]ເຫດສັນນັ້ນທ່ານທັງຫລາຍຕ້ອງເປັນຄົນດີພ້ອມ ເພາະພຣະບິດາເຈົ້າຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນຊົງເປັນຜູ້ດີພ້ອມ.


generated on Tue Jun 17 19:01:42 2025

# 6

[1]ທ່ານຈົ່ງຣະວັງໃຫ້ດີ ຢ່າຕັ້ງຕົເຮັດເປັນຄົນຊອບທັມຕໍ່ຫນ້າຄົນອື່ນ ເພື່ອໃຫ້ພວກເຂົາໄດ້ເຫັນ ຫລື
ບໍ່ດັ່ງນັ້ນແລ້ວທ່ານຈະບໍ່ໄດ້ຮັບບຳເຫນັດຈາກພຣະບິດາເຈົ້າຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນ.[2]ເຫດສັນນັ້ນ ເມື່ອທ່ານໃຫ້ທານ,
ຢ່າເປົ່າແກໄປກ່ອນຫນ້າທ່ານ ເຫມືອນດັ່ງຄົນຫນ້າຊື່ໃຈຄົດເຄີຍເຮັດໃນໂຮງທັມະເທສະຫນາ ແລະ ຕາມຖະຫນົນຕ່າງໆ
ເພື່ອຕົນເອງຈະໄດ້ຮັບການຍ້ອງຍໍຈາກຜູ້ຄົນ. ເຮົາບອກຄວາມຈິງກັບທ່ານວ່າ, ພວກເຂົາໄດ້ຮັບບຳເຫນັດແລ້ວ.

[3]ແຕ່ເມື່ອໃຫ້ທານຢ່າໃຫ້ມືຊ້າຍຮູ້ການທີ່ມືຂວາກຳລັງເຮັດນັ້ນ.[4]ເພື່ອທານຂອງທ່ານຈະໄດ້ເປັນການລັບ ແລະພຣະບິ-
ດາເຈົ້າຂອງພວກທ່ານຜູ້ຊົງເຫັນໃນທີ່ລັບລີ້ຈະຊົງໂຜດປຣະທານບຳເຫນັດແກ່ທ່ານເອງ.
[5]ເມື່ອທ່ານທັງຫລາຍອ້ອນວອນ ຢ່າເປັນເຫມືອນຄົນຫນ້າຊື່ໃຈຄົດ, ເພາະຄົນເຫລົ່ານັ້ນມັກຢືນອ້ອນວອນໃນໂຮງທັມະເທສະຫນາ
ແລະຕາມແຈຖະຫນົນ ເພື່ອທີ່ຈະໃຫ້ມະນຸດເຫັນພວກເຂົາ. ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເຂົາໄດ້ຮັບບຳເຫນັດຂອງຕົນແລ້ວ.
[6]ແຕ່ຝ່າຍທ່ານ, ເມື່ອຈະອ້ອນວອນຈົ່ງເຂົ້າໄປໃນຫ້ອງ ຄັນອັດປະຕູແລ້ວ ແລະອ້ອນວອນຫາພຣະບິດາຂອງທ່ານຜູ້ຊົງສະຖິດໃນທີ່ລັບລີ້
ແລ້ວພຣະບິດາຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ຈະຊົງໂຜດໃຫ້ບຳເຫນັດແກ່ທ່ານ.[7]ເມື່ອທ່ານອະທິຖານ,
ຢ່າເວົ້າຊ້ຳຄຳເກົ່າເຫມືອນຄົນຕ່າງຊາດເຄີຍເຮັດ ເພາະເຂົາຄິດວ່າ ຖ້າເວົ້າຫລາຍຄຳພຣະເຈົ້າຈະຊົງໂຜດຮັບຟັງ.
[8]ດ້ວຍເຫດນີ້ຢ່າເຮັດຄືຄົນເຫລົ່ານັ້ນ ເພາະວ່າສິ່ງໃດທີ່ທ່ານຕ້ອງການ ພຣະບິດາຂອງທ່ານກໍຊົງຊາບກ່ອນພວກທ່ານທູນຂໍ.[9]ສະນັ້ນຈົ່ງອ້ອນ-
ວອນຕາມຢ່າງນີ້ວ່າ, 'ຂ້າແດ່ພຣະບິດາເຈົ້າຂອງພວກຂ້ານ້ອຍທັງຫລາຍ ຜູ້ຊົງສະຖິດໃນສະຫວັນ,
ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ.[10]ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່. ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ
ໃນສະຫວັນເປັນຢ່າງໃດ ກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ.
[11]ຂໍຊົງໂຜດປຣະທານອາຫານປະຈຳວັນໃຫ້ແກ່ພວກຂ້ານ້ອຍທັງຫລາຍໃນກາລະວັນນີ້.
[12]ຂໍຊົງໂຜດຍົກໂທດໃຫ້ຂ້ານ້ອຍເຫມືອນຂ້ານ້ອຍຍົກໂທດ ໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້ານ້ອຍນັ້ນ.[13]ຂໍຢ່າພາຂ້ານ້ອຍເຂົ້າໄປໃນການທົດລອງ
ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ.'
[14]ເພາະຖ້າທ່ານຍົກຄວາມຜິດຂອງເພື່ອນມະນຸດແລ້ວ ພຣະບິດເຈົ້າຂອງທ່ານຜູ້ຊົງສະຖິດໃນສະຫວັນຈະຊົງໂຜດຍົກຄວາມຜິດຂອງທ່ານດ້ວຍ.
[15]ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາເຈົ້າຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເຫມືອນກັນ.
[16]ຍິ່ງກວ່ານັ້ນ, ເມື່ອທ່ານຖືສິນອົດອາຫານ ຢ່າເຮັດຫນ້າເສົ້າ-
ຫມອງເຫມືອນຄົນຫນ້າຊື່ໃຈຄົດ, ດ້ວຍວ່າເຂົາເຮັດຫນ້າເສົ້າຫມອງເພື່ອຈະໃຫ້ມະນຸດເຫັນວ່າເຂົາຖືສິນອົດອາຫານ ເຮົາບອກທ່ານທັງ-
ຫລາຍຕາມຄວາມຈິງວ່າ ເຂົາໄດ້ຮັບບຳເຫນັດຂອງຕົນແລ້ວ.[17]ແຕ່ຝ່າຍທ່ານ, ເມື່ອຖືສິນອົດອາຫານ ຈົ່ງລ້າງຫນ້າ ແລະ ເອົານ້ຳມັນທາຫົວ.
[18]ເພື່ອຈະບໍ່ໃຫ້ມະນຸດເຫັນວ່າທ່ານຖືສິນອົດອາຫານ ແຕ່ໃຫ້ປະກົດແກ່ພຣະບິດາເຈົ້າຂອງທ່ານຜູ້ຊົງສະຖິດໃນທີ່ລັບລີ້ ແລະພຣະບິ-
ດາເຈົ້າຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ກໍຈະຊົງໂຜດປຣະທານບຳເຫນັດແກ່ທ່ານ.
[19]ຢ່າຮິບໂຮມຊັບສົມບັດໄວ້ສຳລັບຕົນໃນໂລກ, ຊຶ່ງເປັນບ່ອນມອດ ແລະ ຂີ້ຫມ້ຽງກັດກິນ, ແລະ ເປັນບ່ອນທີ່ໂຈນເຈາະເຂົ້າລັກເອົາໄດ້.
[20]ແຕ່ຈົ່ງຮິບໂຮມຊັບສົມບັດສຳລັບຕົນໄວ້ໃນສະຫວັນ ບ່ອນມອດ ແລະ ຂີ້ຫມ້ຽງກັດກິນບໍ່ໄດ້ ແລະ ທັງໂຈນເຈາະ ແລະ ລັກເອົາບໍ່ໄດ້.
[21]ເພາະວ່າຊັບສົມບັດຂອງທ່ານຢູ່ໃສ ໃຈຂອງທ່ານກໍຢູ່ທີ່ນັ້ນດ້ວຍ.
[22]ດວງຕາເປັນໂຄມໄຟຂອງຮ່າງກາຍ ຖ້າຕາຂອງທ່ານປົກກະຕິດີ ຮ່າງກາຍທຸກສ່ວນກໍສະຫວ່າງດີ.[23]ແຕ່ຖ້າຕາຂອງທ່ານບໍ່ປົກກະຕິດີ ຮ່າງ-
ກາຍທຸກສ່ວນຂອງທ່ານກໍມືດໄປ. ເຫດສັນນັ້ນ, ຖ້າຄວາມສະຫວ່າງທີ່ຢູ່ໃນຕົວຂອງທ່ານມືດໄປ ຄວາມມືດນັ້ນຈະຫນາທຶບພຽງໃດ?
[24]ບໍ່ມີຜູ້ໃດສາມາດເປັນຂ້າສອງເຈົ້າບ່າວສອງນາຍໄດ້ ເພາະຈະຊັງນາຍຜູ້ນີ້ ແລະ ໄປຮັກນາຍຜູ້ນັ້ນ ຫລື
ຈະອຸທິດຕົນຮັບໃຊ້ນາຍຜູ້ນີ້ແລ້ວຫມິ່ນປະຫມາດຜູ້ນັ້ນ ທ່ານບໍ່ສາມາດຮັບໃຊ້ພຣະເຈົ້າ ແລະ ເງິນຄຳພ້ອມກັນໄດ້.
[25]ດ້ວຍເຫດນັ້ນ ເຮົາຈຶ່ງບອກທ່ານທັງຫລາຍວ່າ, ຢ່າກະວົນກະວາຍເຖິງຊີວິດຂອງຕົນວ່າ ຈະກິນຫຍັງ ຈະດື່ມຫຍັງ ຫລື ກະວົນກະ-
ວາຍເຖິງຮ່າງກາຍຂອງຕົນວ່າ ຈະນຸ່ງຫຍັງ. ເພາະຊີວິດກໍມີຄ່າລື່ນກວ່າອາຫານ ແລະ ຮ່າງກາຍກໍມີຄ່າລື່ນກວ່າເຄື່ອງນຸ່ງຫົ່ມບໍ່ແມ່ນຫລື?
[26]ຈົ່ງເບິ່ງນົກເທິງອາກາດມັນບໍ່ໄດ້ຫວ່ານ, ບໍ່ໄດ້ກ່ຽວ ບໍ່ໄດ້ເກັບໂຮມໃສ່ເລົ້າໄວ້ ແຕ່ພຣະບິດາເຈົ້າຂອງທ່ານຜູ້ຊົງສະຖິດຢູ່ໃນສະ-
ຫວັນກໍຍັງຊົງລ້ຽງພວກມັນ. ພວກທ່ານປະເສີດຫລາຍກວ່ານົກບໍ່ແມ່ນຫລື?
[27]ແລ້ວມີໃຜໃນພວກທ່ານໂດຍຄວາມກະວົນກະວາຍອາດຕໍ່ຊີວິດຂອງຕົນໃຫ້ຍາວອອກໄປອີກຈັກສອກຫນຶ່ງໄດ້?[28]ເປັນຫຍັງທ່ານທັງ-
ຫລາຍຈຶ່ງກະວົນກະວາຍເຖິງເຄື່ອງນຸ່ງຫົ່ມ? ຈົ່ງສັງເກດເບິ່ງດອກໄມ້ໃນທົ່ງ ວ່າມັນຈະເຣີນໃຫຍ່ຂຶ້ນຢ່າງໃດ ມັນບໍ່ໄດ້ເຮັດການ, ບໍ່ໄດ້ເຂັນຝ້າຍ.
[29]ແຕ່ເຮົາບອກທ່ານທັງຫລາຍວ່າ, ເຖິງແມ່ນກະສັດໂຊໂລໂມນ ເມື່ອບໍຣິບູນດ້ວຍສະຫງ່າຣາສີຂອງທ່ານ ກໍຍັງບໍ່ງາມທໍ່ດອກໄມ້ເຫລົ່ານີ້ດອກຫນຶ່ງ.
[30]ຖ້າພຣະເຈົ້າຊົງຕົບແຕ່ງຫຍ້າທີ່ທົ່ງຢ່າງນັ້ນ ຊຶ່ງເປັນຢູ່ມື້ນີ້ ແລະມື້ອື່ນຕ້ອງຖືກຖິ້ມໃສ່ເຕົາໄຟ, ພຣະ-
ອົງຈະບໍ່ຊົງຕົບແຕ່ງທ່ານຫລາຍກວ່ານັ້ນອີກຫລື, ໂອຜູ້ມີຄວາມເຊື່ອນ້ອຍເອີຍ?[31]ເຫດສັນນັ້ນຢ່າກະວົນກະວາຍວ່າ ແລະເວົ້າວ່າ
'ພວກເຮົາຈະກິນຫຍັງ, ຈະດື່ມຫຍັງ ຫລືຈະນຸ່ງຫົ່ມຫຍັງ?'
[32]ເພາະຄົນຕ່າງຊາດສະແຫວງຫາສິ່ງຂອງທັງປວງນີ້, ແລະພຣະບິດາເຈົ້າຂອງທ່ານທັງຫລາຍຜູ້ຊົງສະຖິດຢູ່ໃນສະຫວັນ
ຊົງຮູ້ແລ້ວວ່າພວກທ່ານຕ້ອງການສິ່ງທັງປວງເຫລົ່ານີ້.[33]ແຕ່ກ່ອນອື່ນ, ທ່ານທັງຫລາຍຈົ່ງສະແຫວງຫາຣາຊະອານາຈັກຂອງພຣະເຈົ້າ
ແລະຄວາມຊອບທັມຂອງພຣະອົງກ່ອນ. ແລ້ວພຣະອົງຈະຊົງເພີ່ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ.[34]ເຫດສັນນັ້ນ, ຢ່າກະວົນກະວາຍເຖິງມື້-
ອື່ນ, ເພາະວ່າມື້ອື່ນຄົງມີການກະວົນກະວາຍສຳລັບມັນເອງ ຄວາມທຸກໃນວັນໃດກໍພໍແລ້ວໃນວັນນັ້ນ.


generated on Tue Jun 17 19:01:42 2025

7 [1]ຢ່າກ່າວໂທດໃສ່ຜູ້ອື່ນ ແລະທ່ານຈະບໍ່ຖືກກ່າວໂທດ.[2]ເພາະວ່າທ່ານຈະກ່າວໂທດໃສ່ຜູ້ອື່ນຢ່າງໃດ, ທ່ານກໍຈະຖືກກ່າວໂທດຢ່າງນັ້ນ,
ແລະທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ, ທ່ານກໍຈະຖືກຕວງດ້ວຍເຄື່ອງຜອງອັນນັ້ນເຊັ່ນກັນ.

[3]ເປັນຫຍັງທ່ານຈຶ່ງຫລຽວເຫັນຂີ້ເຫຍື່ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົວທ່ານບໍ່ຮູ້ສຶກ?[4]ເປັນສັນໃດທ່ານຈຶ່ງກ່າວແກ່ພີ່-
ນ້ອງຂອງທ່ານວ່າ ‘ໃຫ້ຂ້ອຍເຂັ່ຽຂີ້ເຫຍື່ອອອກຈາກຕາຂອງເຈົ້າ’ ແຕ່ເບິ່ງແມ, ໄມ້ທັງທ່ອນມີຢູ່ໃນຕາຂອງທ່ານເອງ?[5]ຄົນຫນ້າຊື່ໃຈຄົດເອີຍ!
ຈົ່ງເອົາໄມ້ທັງທ່ອນອອກຈາກຕາຂອງທ່ານກ່ອນ ແລ້ວຈຶ່ງຈະເຂັ່ຽຂີ້ເຫຍື່ອອອກຈາກຕາຂອງພີ່ນ້ອງຂອງທ່ານໄດ້ຢ່າງຊັດເຈນ.
[6]ຢ່າເອົາຂອງປະເສີດໃຫ້ແກ່ຫມາ, ຢ່າໂຍນໄຂ່ມຸກຂອງທ່ານໃສ່ຕໍ່ຫນ້າຫມູ. ຢ້ານວ່າມັນຈະຢຽບຢໍ່າເສັຽ,
ແລະຈະຕ່າວມາຂົບຈີກທ່ານອອກເປັນປ່ຽງໆດ້ວຍ.
[7]ຈົ່ງຫມັ່ນຂໍແລ້ວຈະຊົງປຣະທານໃຫ້. ຈົ່ງຫມັ່ນຊອກແລ້ວຈະພົບ. ຈົ່ງຫມັ່ນເຄາະແລ້ວຈະຊົງໄຂໃຫ້.[8]ເພາະທຸກຄົນທີ່ຫມັ່ນຂໍກໍໄດ້ຮັບ
ແລະທຸກຄົນທີ່ຫມັ່ນຊອກກໍພົບ; ແລະທຸກຄົນທີ່ຫມັ່ນເຄາະກໍຊົງໄຂໃຫ້.[9]ຫຼືໃນພວກທ່ານມີຜູ້ໃດແດ່
ຖ້າລູກຂໍເຂົ້າປັ້ນຫນຶ່ງຈະບໍ່ໄດ້ເອົາກ້ອນຫີນໃຫ້ຫື?[10]ຫລືຖ້າລູກຂໍປາ, ຈະບໍ່ໄດ້ເອົາງູໃຫ້ຫື?
[11]ເຫດສັນນັ້ນ, ຖ້າພວກທ່ານຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ, ແລ້ວພຣະບິດາເຈົ້າຂອງທ່ານຜູ້ຊົງສະຖິດຢູ່ໃນສະຫວັນ
ຈະຊົງປຣະທານຂອງດີແກ່ຜູ້ທີ່ຂໍຈາກພຣະອົງຫລາຍກວ່ານັ້ນອີກຈັກເທົ່າໃດ?[12]ດ້ວຍເຫດນີ້, ສິ່ງໃດກໍຕາມທີ່ທ່ານປາຖນາໃຫ້ເຂົາເຮັດແກ່ທ່ານ
ທ່ານຈົ່ງເຮັດກັບເຂົາທຸກປະການເຫມືອນກັນ ເພາະອັນນັ້ນຄືພຣະບັນຍັດແລະຄຳສັ່ງສອນຂອງບັນດາຜູ້ປະກາດພຣະທັມ.
[13]ເພາະວ່າປະຕູກວ້າງແລະທາງກວ້າງຂວາງນັ້ນນຳໄປເຖິງຄວາມຈິບຫາຍ ມີຫລາຍຄົນເຂົ້າໄປຕາມທາງນັ້ນ.[14]ເພາະວ່າປະຕູທີ່ນຳໄປສູ່ຊີ-
ວິດກໍຄັບແລະທາງກໍແຄບ, ແລະບໍ່ມີຫລາຍຄົນພົບທາງນັ້ນ.
[15]ຈົ່ງຣະວັງຜູ້ປະກາດພຣະທັມປອມ ທີ່ສວມສະພາບເຫມືອນແກະມາຫາທ່ານ ແຕ່ທີ່ຈິງແລ້ວພາຍໃນເຂົາເປັນຫມາໄນຕົວຮ້າຍ.[16]ທ່ານຈະຮູ້-
ຈັກເຂົາໄດ້ດ້ວຍຜົນຂອງເຂົາ ເຂົາເຄີຍເກັບຫມາກອະງຸ່ນຈາກເຄືອມີຫນາມຫລື ແລະເຂົາເຄີຍເກັບຫມາກເດື່ອເທດຈາກຕົ້ນມີຫນາມຫລື?
[17]ເຊັ່ນດຽວກັນນີ້, ໄມ້ດີທຸກຕົ້ນຍ່ອມເກີດຜົນດີ ແຕ່ຕົ້ນໄມ້ບໍ່ດີກໍເກີດຜົນບໍ່ດີ.
[18]ຕົ້ນໄມ້ດີຈະເກີດຜົນບໍ່ດີບໍ່ໄດ້ ຫລືຕົ້ນໄມ້ບໍ່ດີຈະເກີດຜົນດີກໍບໍ່ໄດ້.[19]ໄມ້ທຸກຕົ້ນທີ່ບໍ່ເກີດຜົນດີຕ້ອງຖືກຟັນຖິ້ມໃສ່ໄຟເສັຽ.[20]ເຫດສັນນັ້ນ,
ພວກທ່ານຈະຮູ້ຈັກເຂົາໄດ້ດ້ວຍຜົນຂອງເຂົາ.
[21]ບໍ່ແມ່ນຫມົດທຸກຄົນທີ່ກ່າວແກ່ເຮົາວ່າ, ‘ພຣະອົງເຈົ້າ, ພຣະອົງເຈົ້າ’ ແລ້ວຈະເຂົ້າໃນອານາຈັກສະຫວັນ, ແຕ່ເຂົ້າໄດ້ແຕ່ຜູ້ທີ່ເຮັດຕາມນ້ຳພຣະ-
ທັຍພຣະບິດາເຈົ້າຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນເທົ່ານັ້ນ.[22]ຫລາຍຄົນຈະຮ້ອງໃສ່ເຮົາໃນວັນນັ້ນວ່າ ‘ພຣະອົງເຈົ້າ, ພຣະອົງເຈົ້າ
ພວກຂ້ານ້ອຍໄດ້ປະກາດພຣະທັມໃນພຣະນາມຂອງພຣະອົງ, ໄດ້ຂັບໄລ່ຜີອອກໃນພຣະນາມຂອງພຣະອົງ ແລະໄດ້ເຮັດການອິດທິ-
ຣິດຫລາຍປະການໃນພຣະນາມຂອງພຣະອົງບໍ່ແມ່ນຫລື?’[23]ແລ້ວເມື່ອນັ້ນເຮົາຈະໄດ້ປະກາດແກ່ເຂົາຢ່າງເປີດເຜີຍວ່າ ‘ເຮົາບໍ່ຮູ້-
ຈັກພວກເຈົ້າຈັກເທື່ອ, ຈົ່ງຜ່າຍຫນີໃຫ້ພົ້ນຈາກເຮົາ, ເຈົ້າຜູ້ເຮັດການຊົ່ວຮ້າຍເອີຍ.
[24]ເຫດສັນນັ້ນ, ທຸກຄົນທີ່ຟັງຄຳເຫລົ່ານີ້ຂອງເຮົາແລະປະຕິບັດຕາມ ຄົນນັ້ນກໍປຽບເຫມືອນຄົນສະຫລາດ ທີ່ກໍ່ສ້າງເຮືອນຂອງຕົນເທິງດານຫີນ.
[25]ຝົນກໍຕົກ, ນ້ຳກໍນອງ, ແລະລົມກໍພັດປະທະເຮືອນນັ້ນ ແຕ່ເຮືອນນັ້ນກໍບໍ່ພັງເພລົ່ງ ເພາະຮາກມັນຕັ້ງຢູ່ເທິງຫີນ.
[26]ແຕ່ທຸກຄົນທີ່ໄດ້ຍິນຖ້ອຍຄຳເຫລົ່ານີ້ຂອງເຮົາແລະບໍ່ເຊື່ອຟັງຖ້ອຍຄຳເຫຼົ່ານີ້ ກໍປຽບເຫມືອນຄົນໂງ່ທີ່ກໍ່ສ້າງເຮືອນຂອງຕົນເທິງຫາດຊາຍ.
[27]ຝົນກໍຕົກ, ນ້ຳກໍນອງ, ແລະລົມກໍພັດປະທະເຮືອນນັ້ນ, ແລະເຮືອນນັ້ນກໍເພພັງລົງ ແລະການເພພັງຂອງມັນກໍເປັນການໃຫຍ່ຫລວງ.”
[28]ຢູ່ມາເມື່ອພຣະເຢຊູເຈົ້າຊົງກ່າວຄຳເຫລົ່ານີ້ຈົບລົງແລ້ວ ປະຊາຊົນທັງປວງກໍປະຫລາດໃຈໃນການສັ່ງສອນຂອງພຣະອົງ,[29]ເພາະ-
ວ່າພຣະອົງຊົງສັ່ງສອນເຂົາເຫມືອນຜູ້ມີຣິດອຳນາດ, ແລະບໍ່ເຫມືອນພວກທັມະຈານຂອງພວກເຂົາ.


generated on Tue Jun 17 19:01:42 2025

8 [1]ເມື່ອພຣະເຢຊູເຈົ້າສະເດັດລົງມາຈາກພູແລ້ວ ປະຊາຊົນຫລວງຫລາຍໄດ້ຕິດຕາມພຣະອົງໄປ.[2]ເບິ່ງແມ, ມີຄົນຂີ້-
ທູດຜູ້ຫນຶ່ງເຂົ້າມາຂາບລົງທູນພຣະອົງວ່າ, “ນາຍເອີຍ, ຖ້າທ່ານພໍໃຈກໍອາດຈະເຮັດໃຫ້ຂ້ານ້ອຍດີສະອາດໄດ້.”[3]ພຣະເຢຊູຄຣິດເຈົ້າ
ຈຶ່ງຊົງຢຽດພຣະຫັດອອກຖືກຄົນນັ້ນແລະຊົງກ່າວວ່າ, “ເຮົາພໍໃຈແລ້ວ ຈົ່ງດີສະອາດເສັຽ” ແລ້ວຄົນຜູ້ນັ້ນກໍດີພະຍາດຂີ້ທູດໂດຍທັນທີ.

[4]ພຣະເຢຊູເຈົ້າຊົງກ່າວແກ່ຜູ້ນັ້ນວ່າ, “ຣະວັງຢ່າບອກໃຫ້ຜູ້ໃດຟັງ ແຕ່ຈົ່ງໄປສະແດງຕົວຕໍ່ປະໂລຫິດ ແລະຖວາຍເຄື່ອງບູຊາຕາມໂມເຊໄດ້ສັ່ງໄວ້
ເພື່ອເປັນຫລັກຖານຕໍ່ເຂົາ.”
[5]ມີນາຍຮ້ອຍທະຫານຜູ້ຫນຶ່ງມາອ້ອນວອນພຣະອົງ,[6]ທູນວ່າ, “ພຣະອົງເຈົ້າເອີຍ, ຄົນໃຊ້ຂອງຂ້າ-
ນ້ອຍນອນປ່ວຍຢູ່ທີ່ເຮືອນເຂົາເປັນເປ້ຽແລະທົນທຸກເວດທະນາຫລາຍ.”[7]ພຣະເຢຊູເຈົ້າຊົງບອກກັບນາຍຮ້ອຍນັ້ນວ່າ,
“ເຮົາຈະໄປຮັກສາໃຫ້ລາວຫາຍດີ.”
[8]ນາຍຮ້ອຍທູນຕອບພຣະອົງວ່າ“ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງຄາເຮືອນຂອງຂ້ານ້ອຍ,
ຂໍທ່ານກ່າວເທົ່ານັ້ນຄົນໃຊ້ຂອງຂ້ານ້ອຍກໍຈະດີພະຍາດ.[9]ເຫດວ່າຂ້ານ້ອຍເປັນຄົນຢູ່ໃຕ້ວິໄນທະຫານ ແລະຍັງມີທະຫານຢູ່ໃຕ້ບັງຄັບບັນ-
ຊາຂອງຂ້ານ້ອຍອີກ, ຂ້ານ້ອຍສັ່ງແກ່ຄົນນັ້ນວ່າ ‘ໄປ’ ເຂົາກໍໄປ ແລະສັ່ງຄົນນີ້ວ່າ ‘ມາ’ ເຂົາກໍມາ ແລະບອກແກ່ຄົນໃຊ້ຂອງຂ້ານ້ອຍວ່າ
‘ຈົ່ງເຮັດສິ່ງນີ້’ ເຂົາກໍເຮັດ.”[10]ເມື່ອພຣະເຢຊູເຈົ້າຊົງໄດ້ຍິນດັ່ງນັ້ນກໍປະຫລາດໃຈ, ແລະ ຊົງກ່າວກັບຄົນທັງຫລາຍທີ່ຕິດຕາມພຣະອົງມາວ່າ,
“ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເຮົາບໍ່ພົບຜູ້ໃດມີຄວາມເຊື່ອໃຫຍ່ທໍ່ນີ້ ໃນພວກອິສະຣາເອນເລີຍ.
[11]ເຮົາບອກທ່ານທັງຫລາຍວ່າ ຈະມີຫລາຍຄົນຈາກທິດຕາເວັນອອກແລະທິດຕາເວັນຕົກ ແລ້ວພວກເຂົາຈະນັ່ງຮ່ວມໂຕະອາຫານກັບອັບຣາຮາມ,
ອີຊາກ, ແລະຢາໂຄບໃນອານາຈັກສະຫວັນ.[12]ແຕ່ຝ່າຍຊາວອານາຈັກແຜ່ນດິນນັ້ນຈະຖືກຖິ້ມອອກໄປໃນທີ່ມືດພາຍນອກ ທີ່ນັ້ນຈະມີສຽງຮ້ອງ-
ໄຫ້ແລະຂົບແຂ້ວຢູ່.”[13]ພຣະເຢຊູເຈົ້າຊົງບອກແກ່ນາຍຮ້ອຍຜູ້ນັ້ນວ່າ, “ຈົ່ງກັບເມືອເຖີດ ເພາະທ່ານເຊື່ອ ກໍຈະສຳເລັດຕາມທີ່ທ່ານຂໍ”
ແລ້ວຄົນໃຊ້ຜູ້ນັ້ນກໍໄດ້ດີເປັນປົກກະຕິໃນໂມງນັ້ນ.
[14]ເມື່ອພຣະເຢຊູເຈົ້າໄດ້ສະເດັດເຂົ້າໄປໃນເຮືອນຂອງເປໂຕ ພຣະອົງເຫັນແມ່ເຖົ້າຂອງເປໂຕນອນເປັນໄຂ້ຢູ່.[15]ພຣະເຢຊູເຈົ້າຊົງຈັບມື-
ນາງແລ້ວຄວາມໄຂ້ກໍຫາຍ. ຈາກນັ້ນນາງຈຶ່ງລຸກຂຶ້ນບົວລະບັດພຣະອົງ.
[16]ເມື່ອຄ່ຳມາ ຝູງປະຊາຊົນໄດ້ພາຄົນທີ່ມີຜີຮ້າຍສິງຢູ່ຫລາຍຄົນມາຫາພຣະອົງ. ພຣະອົງກໍຊົງຂັບໄລ່ຜີຮ້າຍເຫລົ່າ-
ນັ້ນອອກດ້ວຍຄຳສັ່ງຂອງພຣະອົງ ແລະບັນດາຄົນເຈັບປ່ວຍທັງຫລາຍນັ້ນ ພຣະອົງກໍໄດ້ຊົງໂຜດໃຫ້ດີ.[17]ທັງນີ້ເພື່ອຈະໃຫ້ສຳ-
ເລັດຕາມທີ່ຊົງກ່າວໄວ້ໂດຍເອຊາຢາຜູ້ປະກາດພຣະທັມວ່າ, “ທ່ານໄດ້ແບກເອົາຄວາມເຈັບໄຂ້ ແລະຫອບເອົາພະຍາດຂອງເຮົາໄປ.”
[18]ບັດນີ້ເມື່ອພຣະເຢຊູເຈົ້າຊົງເຫັນປະຊາຊົນຫລວງຫລາຍອ້ອມຮອບພຣະອົງຢູ່
ພຣະອົງກໍໄດ້ຊົງສັ່ງໃຫ້ຂ້າມໄປຟາກໜຶ່ງຂອງທະເລສາບຄາລີເລ.[19]ຈາກທີ່ນັ້ນ ມີນັກທັມຜູ້ຫນຶ່ງມາຫາພຣະເຢຊູເຈົ້າແລະເວົ້າວ່າ,
“ອາຈານເອີຍ, ທ່ານຈະໄປທີ່ໃດ ຂ້ານ້ອຍຈະຕິດຕາມທ່ານໄປທີ່ນັ້ນ.”[20]ພຣະເຢຊູເຈົ້າຊົງຕອບວ່າ, “ຫມາຈິກຈອກກໍມີຮູ ແລະນົກປ່າກໍຍັງມີຮັງ
ແຕ່ບຸດມະນຸດບໍ່ມີບ່ອນຈະວາງຫົວລົງ.”
[21]ມີອີກຜູ້ຫນຶ່ງໃນພວກສິດຂອງພຣະເຢຊູເຈົ້າມາທູນພຣະອົງວ່າ, ພຣະອົງເຈົ້າເອີຍ, ຂໍໂຜດອະນຸຍາດໃຫ້ຂ້ານ້ອຍໄປຝັງສົບພໍ່ຂອງຂ້າ-
ນ້ອຍເສັຽກ່ອນ.”[22]ແຕ່ພຣະເຢຊູເຈົ້າຊົງຕອບວ່າ, “ຈົ່ງຕິດຕາມເຮົາມາເສັຽ ແລະປະໃຫ້ຄົນຕາຍຝັງກັນເອງເທາະ.”
[23]ເມື່ອພຣະເຢຊູເຈົ້າສະເດັດລົງເຮືອ ພວກສາວົກຂອງພຣະອົງກໍຕິດຕາມພຣະອົງໄປ.[24]ເບິ່ງແມ, ບັງເກີດມີພາຍຸລູກໃຫຍ່ເກີດທີ່ກາງທະເລ
ຈົນເຮືອຖືກຄື້ນປະທະ ແຕ່ພຣະເຢຊູເຈົ້າຊົງບັນທົມຫລັບຢູ່.[25]ພວກສາວົກໄດ້ມາປຸກພຣະອົງທູນວ່າ, ພຣະອົງເຈົ້າເອີຍ,
ຊ່ວຍພວກຂ້ານ້ອຍແດ່ທ້ອນ ເພາະພວກຂ້ານ້ອຍກຳລັງຈະຕາຍຢູ່ແລ້ວ.”
[26]ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ, “ໂອ ຄົນມີຄວາມເຊື່ອນ້ອຍເອີຍ, ເປັນຫຍັງພວກເຈົ້າຈຶ່ງຢ້ານ?” ແລ້ວພຣະ-
ອົງຊົງລຸກຂຶ້ນຫ້າມລົມແລະຟອງນ້ຳໃຫ້ຢຸດ. ແລ້ວທຸກຢ່າງກໍສະຫງົບງຽບ.[27]ຄົນເຫລົ່ານັ້ນກໍພາກັນອັດສະຈັນໃຈ ແລະ ເວົ້າກັນວ່າ,
“ທ່ານຜູ້ນີ້ເປັນໃຜນໍ ຈົນວ່າລົມ ແລະຟອງນ້ຳທະເລກໍຍອມຟັງເພິ່ນ?”
[28]ເມື່ອພຣະເຢຊູເຈົ້າສະເດັດຂ້າມຟາກໄປເຖິງຟາກຫນຶ່ງ ແລະມາເຖິງເຂດແດນຄາດາຣາ, ມີສອງຄົນທີ່ມີຜີສິງຢູ່ອອກຈາກປ່າຊ້າມາພົບພຣະ-
ອົງ ແລະພວກເຂົາໂຫດຮ້າຍຫລາຍຈົນບໍ່ມີຜູ້ໃດອາດຫຽວທາງນັ້ນໄດ້.[29]ເບິ່ງແມ, ພວກເຂົາຮ້ອງໃສ່ພຣະອົງທູນວ່າ,
“ພຣະບຸດຂອງພຣະເຈົ້າເອີຍ, ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ? ທ່ານມາທີ່ນີ້ເພື່ອຈະມາທໍຣະມານເຮົາກ່ອນເວລາກຳນົດຫລື?”
[30]ໃນຂະນະນັ້ນ ມີຫມູຝູງໃຫຍ່ກຳລັງຫາກິນຢູ່ບໍລິເວນ ບໍ່ໄກຈາກພວກເຂົາ.
[31]“ຖ້າທ່ານຂັບໄລ່ພວກຂ້ານອັຍອອກໄປຂໍໃຫ້ພວກຂ້ານ້ອຍເຂົ້າໄປສິງຢູ່ໃນຝູງຫມູນັ້ນທ້ອນ.”[32]ພຣະເຢຊູເຈົ້າຊົງບອກຜີເຫລົ່ານັ້ນວ່າ, “ໄປ”
ຜີເຫລົ່ານັ້ນກໍອອກໄປ ແລະເຂົ້າສິງຢູ່ໃນຝູງຫມູ ແລະເບິ່ງແມ, ຫມູທັງຝູງນັ້ນໄດ້ຟ້າວແລ່ນລົງຈາກຕາຫລີ່ງຊັນໂຕນໃສ່ທະເລຕາຍດິກນ້ຳຫມົດ.
[33]ຝ່າຍຄົນລ້ຽງຫມູກໍພາກັນປົບຫນີ ແລະເມື່ອພວກເຂົາເຂົ້າໄປໃນເມືອງ ພວກເຂົາເລົ່າບັນດາເຫດການຊຶ່ງເປັນໄປນັ້ນ
ກັບເຫດທີ່ເກີດຂຶ້ນແກ່ຄົນທີ່ມີຜີສິງຢູ່.[34]ເບິ່ງແມ, ຄົນທັງເມືອງກໍພາກັນອອກມາຫາພຣະເຢຊູເຈົ້າ. ເມື່ອພົບພຣະອົງແລ້ວ, ພວກເຂົາຈຶ່ງອ້ອນ-
ວອນທູນຂໍໃຫ້ພຣະອົງອອກໄປເສັຽຈາກເຂດແດນຂອງພວກເຂົາ.


generated on Tue Jun 17 19:01:42 2025

9 [1]ຝ່າຍພຣະເຢຊູເຈົ້າໄດ້ສະເດັດລົງເຮືອຂ້າມຟາກໄປຍັງເມືອງຂອງພຣະອົງ.[2]ເບິ່ງແມ,
ເຂົາຫາມຄົນເປັ້ຽຜູ້ຫນຶ່ງຊຶ່ງນອນຢູ່ເທິງທີ່ນອນມາຫາພຣະອົງ. ເມື່ອພຣະເຢຊູເຈົ້າຊົງເຫັນຄວາມເຊື່ອຂອງເຂົາ ຈຶ່ງຊົງກ່າວແກ່ຄົນເປັ້ຽນັ້ນວ່າ,
“ລູກເອີຍ, ຈົ່ງຊື່ນໃຈເຖີ້ນຜິດບາບຂອງເຈົ້າໄດ້ຮັບການອະພັຍແລ້ວ.”

[3]ເບິ່ງແມ, ພວກທັມະຈານບາງຄົນເວົ້າກັນວ່າ, “ຜູ້ນີ້ກໍາລັງເວົ້າຫມິ່ນປະຫມາດພຣະເຈົ້າ.”[4]ຝ່າຍພຣະ-
ເຢຊູເຈົ້າຊົງຮູ້ຄວາມຄຶດຂອງເຂົາຈຶ່ງຊົງກ່າວວ່າ, “ຍ້ອນເຫດໃດທ່ານທັງຫລາຍຈຶ່ງຄຶດຄວາມຊົ່ວໃນໃຈ?[5]ທີ່ຈະວ່າ
‘ຜິດບາບຂອງເຈົ້າໄດ້ຮັບການອະພັຍແລ້ວ’ ຫລືຈະວ່າ ‘ຈົ່ງລຸກຂຶ້ນແລະຍ່າງໄປເຖີ້ນ’ ອັນໃດຈະງ່າຍກວ່າກັນ?[6]ບຸດມະນຸດມີສິດອໍາ-
ນາດເທິງແຜ່ນດິນໂລກທີ່ຈະໃຫ້ອະພັຍຄວາມຜິດບາບໄດ້...” ພຣະອົງຈຶ່ງຊົງກ່າວກັບຄົນເປັ້ຽນັ້ນວ່າ, “ຈົ່ງລຸກ-
ຂຶ້ນຍົກເອົາບ່ອນນອນຂອງເຈົ້າໄປບ້ານສາ.”
[7]ແລ້ວຄົນເປັ້ຽນັ້ນກໍລຸກຂຶ້ນເມືອເຮືອນຂອງຕົນ.[8]ເມື່ອປະຊາຊົນເຫັນດັ່ງນີ້ແລ້ວ ພວກເຂົາກໍປະຫລາດໃຈ ແລະຈຶ່ງພາກັນສັນຣະເສີນພຣະ-
ເຈົ້າຜູ້ຊົງປຣະທານຣິດອໍານາດດັ່ງນັ້ນແກ່ມະນຸດ.[9]ຂະນະທີ່ພຣະເຢຊູເຈົ້າກໍາລັງສະເດັດຈາກບ່ອນນັ້ນໄປ ພຣະອົງຊົງເຫັນຊາຍຜູ້ຫນຶ່ງຊື່ມັດ-
ທາຍນັ່ງຢູ່ດ່ານພາສີ ພຣະອົງຊົງກ່າວແກ່ຜູ້ນັ້ນວ່າ, “ຈົ່ງຕາມເຮົາມາ” ເພິ່ນກໍລຸກຂຶ້ນ ແລະຕາມພຣະອົງໄປ.
[10]ເມື່ອພຣະເຢຊູເຈົ້າຮ່ວມຮັບປະທານອາຫານຄໍ່າຢູ່ໃນເຮືອນຂອງມັດທາຍ, ເບິ່ງແມ, ມີຄົນເກັບພາສີແລະຄົນນອກສິລະທັມຫລາຍຄົນເຂົ້າມານັ່ງ
ຮ່ວມໂຕະກັບພຣະເຢຊູເຈົ້າແລະພວກສິດຂອງພຣະອົງ.[11]ເມື່ອພວກຟາຣີຊາຍເຫັນດັ່ງນັ້ນກໍພາກັນຖາມພວກສິດຂອງພຣະອົງວ່າ, “ເປັນຫຍັງອາ-
ຈານຂອງພວກເຈົ້າຈຶ່ງຮັບປະທານອາຫານ ຮ່ວມກັບຄົນເກັບພາສີແລະຄົນນອກສິລະທັມເຫລົ່ານັ້ນ?”
[12]ສ່ວນພຣະເຢຊູເຈົ້າ ເມື່ອຊົງໄດ້ຍິນດັ່ງນັ້ນແລ້ວຈຶ່ງຊົງກ່າວວ່າ, “ຄົນທີ່ຮ່າງກາຍແຂງແຮງບໍ່ຕ້ອງການຫມໍ, ແຕ່ຄົນເຈັບກໍຕ້ອງການຫມໍ.
[13]ທ່ານທັງຫລາຍຈົ່ງໄປຮຽນຂໍ້ນີ້ໃຫ້ເຂົ້າໃຈທີ່ວ່າ ‘ເຮົາປະສົງຄວາມເມດຕາແລະບໍ່ປະສົງເຄື່ອງບູຊາ’
ເພາະເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິລະທັມ ແຕ່ມາເອີ້ນເອົາຄົນນອກສິລະທັມ.”
[14]“ເຫດໃດພວກຂ້ານ້ອຍແລະພວກຟາຣີຊາຍຈຶ່ງຖືສິນອົດອາຫານຢູ່ເລື້ອຍ, ແຕ່ພວກສິດຂອງທ່ານບໍ່ຖື.”[15]ພຣະເຢຊູເຈົ້າຊົງຕອບເຂົາວ່າ,
“ຜູ້ທີ່ມາຮ່ວມງານແຕ່ງງານຈະຕ້ອງໂສກເສົ້າ ເມື່ອເຈົ້າບ່າວຍັງຢູ່ກັບເຂົາບໍ? ແຕ່ມື້ນັ້ນຈະມາເມື່ອເຈົ້າບ່າວຖືກຍົກຍ້າຍຈາກເຂົາໄປ ແລ້ວເມື່ອ-
ນັ້ນພວກເຂົາຈະຖືສິນອົດອາຫານ.
[16]ບໍ່ຫ່ອນມີຜູ້ໃດເອົາຕ່ອນຜ້າໃຫມ່ມາຕາບເສື້ອເກົ່າ, ເພາະຕ່ອນຜ້າໃຫມ່ທີ່ນໍາມາຕາບຈະເຮັດເປັນຮອຍຂາດກວ້າງອອກຕື່ມອີກ.
[17]ຫລືບໍ່ມີໃຜທີ່ເທເຫລົ້າແວງໃຫມ່ມາໃສ່ໄວ້ໃນຖົງຫນັງເກົ່າ. ຖ້າເຮັດຢ່າງນັ້ນ, ຖົງຫນັງຈະຂາດແລະເຫລົ້າແວງຈະຮົ່ວອອກ,
ແລະທັງຖົງຫນັງກໍຈະເສັຽໄປເຫມືອນກັນ, ແຕ່ເຂົາເອົາເຫລົ້າແວງໃຫມ່ໃສ່ໄວ້ໃນຖົງຫນັງໃຫມ່ ແລ້ວທັງສອງຢ່າງກໍຢູ່ດີດ້ວຍກັນ."
[18]ຂະນະທີ່ພຣະເຢຊູເຈົ້າກໍາລັງກ່າວຖ້ອຍຄໍາເຫລົ່ານີ້ແກ່ເຂົາຢູ່, ເບິ່ງແມ, ມີເຈົ້ານາຍຢິວຜູ້ຫນຶ່ງໄດ້ມາຄຸເຂົ່າຂາບຕໍ່ຫນ້າພຣະອົງ ທູນວ່າ,
“ລູກສາວຂອງຂ້ານ້ອຍຫາກໍສິ້ນໃຈຕາຍ ແຕ່ຂໍເຊີນທ່ານໄປວາງມືໃສ່ນາງດ້ວຍເຖີ້ນ ແລ້ວນາງຈະຄືນມີຊີວິດອີກ.”[19]ແລ້ວພຣະ-
ເຢຊູເຈົ້າຊົງລຸກຂຶ້ນສະເດັດຕາມນາຍຜູ້ນັ້ນໄປພ້ອມດ້ວຍພວກລູກສິດຂອງພຣະອົງ.
[20]ໃນຂະນະນັ້ນ ມີຜູ້ຍິງຄົນຫນຶ່ງເປັນພະຍາດເລືອດຕົກໄດ້ສິບສອງປີມາແລ້ວ,
ນາງໄດ້ຫຍັບເຂົ້າມາເບື້ອງຫລັງພຣະເຢຊູເຈົ້າແລ້ວບາຍແຄມເຄື່ອງທົງຂອງພຣະອົງ.[21]ເພາະນາງຄຶດໃນໃຈວ່າ,
“ຖ້າເຮົາໄດ້ບາຍແຕ່ເສື້ອຂອງເພິ່ນເທົ່ານັ້ນ ເຮົາກໍຈະດີພະຍາດ.”[22]ແລ້ວຊົງກ່າວວ່າ, “ລູກຍິງເອີຍ, ຈົ່ງຊື່ນໃຈເຖີ້ນ
ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ.” ແລະທັນໃດນັ້ນນາງກໍດີປົກກະຕິ.
[23]ເມື່ອພຣະເຢຊູເຈົ້າສະເດັດໄປເຖິງເຮືອນນາຍຜູ້ນັ້ນ ກໍຊົງເຫັນພວກຄົນເປົ່າປີ່ ແລະກັບຝູງຄົນອຶກກະທຶກກັນຢູ່.[24]ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ,
“ຈົ່ງຖອຍອອກໄປເສັຽ, ເພາະວ່າສາວນ້ອຍຄົນນີ້ບໍ່ໄດ້ຕາຍດອກ, ແຕ່ຫລັບຢູ່ເທົ່ານັ້ນ.” ແຕ່ພວກເຂົາພາກັນຫົວຂວັນພຣະອົງ.
[25]ເມື່ອຝູງຄົນໄດ້ຖືກຂັບໄລ່ອອກຫມົດແລ້ວ, ພຣະອົງໄດ້ສະເດັດເຂົ້າໄປໃນຫ້ອງ ແລະຈັບມືຂອງນາງ, ແລະນາງກໍລຸກຂຶ້ນ.
[26]ຂ່າວກ່ຽວກັບເລື່ອງນີ້ກໍຊ່າລືໄປທົ່ວເຂດແດນນັ້ນ.
[27]ຂະນະທີ່ພຣະເຢຊູເຈົ້າສະເດັດຈາກບ່ອນນັ້ນໄປ, ກໍມີຄົນຕາບອດສອງຄົນຕິດຕາມພຣະອົງ. ພວກເຂົາຮ້ອງຢູ່ຕະຫລອດທາງວ່າ,
“ບຸດດາວິດເອີຍ, ໂຜດເມດຕາພວກຂ້ານ້ອຍແດ່ທ້ອນ!”[28]ເມື່ອພຣະເຢຊູເຈົ້າສະເດັດເຂົ້າໄປໃນເຮືອນແລ້ວ
ຊາຍຕາບອດສອງຄົນນັ້ນກໍເຂົ້າມາຫາພຣະອົງ. ພຣະເຢຊູເຈົ້າຊົງຖາມເຂົາວ່າ, “ພວກເຈົ້າເຊື່ອວ່າເຮົາອາດຈະເຮັດການນີ້ໄດ້ຫລື?”
ພວກເຂົາກໍຕອບພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍເຊື່ອ.”
[29]ຈາກນັ້ນພຣະເຢຊູເຈົ້າຊົງບາຍຕາຂອງເຂົາພ້ອມກັບຊົງກ່າວວ່າ,
“ໃຫ້ເປັນໄປຕາມຄວາມເຊື່ອຂອງເຈົ້າ,”[30]ແລະຕາຂອງພວກເຂົາກໍເປີດອອກເຫັນຮຸ່ງ ແລ້ວພຣະເຢຊູເຈົ້າຊົງສັ່ງຫ້າມເຂົາຢ່າງແຂງແຮງວ່າ,
“ຈົ່ງຣະວັງຢ່າໃຫ້ຜູ້ໃດຮູ້ເລື່ອງນີ້ເດັດຂາດ.”[31]ແຕ່ເມື່ອຊາຍທັງສອງຈາກໄປ ແລ້ວພວກເຂົາ ກໍປະກາດຂ່າວກ່ຽວກັບ
ພຣະອົງໃຫ້ຊ່າລືໄປທົ່ວທັງຂົງເຂດນັ້ນ.
[32]ໃນຂະນະທີ່ຊາຍທັງສອງກໍາລັງອອກໄປ, ເບິ່ງແມ, ມີຜູ້ພາຄົນປາກກືກຜູ້ຫນຶ່ງທີ່ມີຜີສິງຢູ່ມາຫາພຣະເຢຊູເຈົ້າ.[33]ເມື່ອຜີນັ້ນຖືກຂັບໄລ່ອອກແລ້ວ
ຄົນປາກກືກກໍປາກໄດ້. ຝູງຄົນທັງຫລາຍກໍອັດສະຈັນໃຈເວົ້າກັນວ່າ, “ສິ່ງນີ້ບໍ່ເຄີຍປະກົດເຫັນຈັກເທື່ອໃນຊາດອິສະຣາເອນ,”[34]ແຕ່ພວກຟາຣີ-
ຊາຍເວົ້າວ່າ, “ຄົນນີ້ຂັບໄລ່ຜີອອກໄດ້ດ້ວຍຣິດຂອງນາຍຜີຮ້າຍ.”
[35]ພຣະເຢຊູເຈົ້າໄດ້ສະເດັດໄປທົ່ວທຸກເມືອງ ແລະທຸກບ້ານ. ພຣະອົງຊົງສັ່ງສອນໃນໂຮງທັມະສາລາຂອງພວກເຂົາ, ຊົງປະກາດຂ່າວປະເສີດຂອງ-
ອານາຈັກສະຫວັນ, ແລະ ຊົງໂຜດຮັກສາຄົນມີພະຍາດ ແລະ ຄວາມເຈັບໄຂ້ທຸກຢ່າງໃຫ້ດີຫມົດ.[36]ເມື່ອພຣະອົງຊົງເຫັນປະຊາຊົນຫລວງ-
ຫລາຍກໍຊົງສົງສານເຂົາ, ເພາະເຂົາຖືກລົບກວນແລະຂາດກໍາລັງໃຈ. ພວກເຂົາເປັນເຫມືອນຝູງແກະທີ່ບໍ່ມີຜູ້ລ້ຽງ.
[37]ພຣະອົງຊົງກ່າວແກ່ພວກລູກສິດຂອງພຣະອົງວ່າ, “ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້ ແຕ່ຄົນງານມີຫນ້ອຍຢູ່.[38]ເພາະສັນນັ້ນ ພວກທ່ານຈົ່ງອ້ອນ-
ວອນຜູ້ເປັນເຈົ້າຂອງນາ ໃຫ້ຈ້າງຄົນງານມາໃນການເກັບກ່ຽວພືດຜົນຂອງຕົນເສັຽ.”


generated on Tue Jun 17 19:01:42 2025

10 [1]ພຣະເຢຊູເຈົ້າຊົງເອີ້ນສາວົກສິບສອງຄົນຂອງພຣະອົງມາພ້ອມກັນ ແລະຊົງປຣະທານໃຫ້ເຂົາມີອຳນາດເຫນືອຜີຖ່ອຍຮ້າຍ,
ເພື່ອຂັບໄລ່ມັນອອກໄດ້ ແລະເພື່ອໃຫ້ພະຍາດທັງຄວາມເຈັບໄຂ້ທຸກຢ່າງດີໄດ້.

[2]ບັດນີ້ ພວກອັກຄະສາວົກສິບສອງຄົນມີຊື່ດັ່ງນີ້: ຜູ້ທຳອິດຊື່ ຊີໂມນທີ່ເອີ້ນວ່າເປໂຕ ກັບອັນເດອານ້ອງຊາຍຂອງລາວ, ຢາໂກໂບລູກເຊເບດາຍ
ກັບໂຢຮັນນ້ອງຊາຍຂອງລາວ;[3]ຟີລິບ ແລະ ບາຣະໂທໂລມາຍ, ໂທມາ ແລະ ມັດທາຍຜູ້ເກັບພາສີ. ຢາໂກໂບລູກອາລະຟາຍແລະທາດາຍ,[4]ຊີ-
ໂມນພັກຊາດນິຍົມ ແລະ ຢູດາອິສະກາຣິອົດ, ຜູ້ທີ່ທໍຣະຍົດຕໍ່ພຣະອົງ.
[5]ພວກສິບສອງຄົນນີ້ພຣະເຢຊູເຈົ້າຊົງໃຊ້ໃຫ້ອອກໄປ ແລະຊົງສັ່ງເຂົາວ່າ, “ຢ່າໄດ້ເຂົ້າໄປໃນເມືອງຂອງພວກຕ່າງຊາດ
ແລະຢ່າເຂົ້າໄປໃນເມືອງໃດຂອງຊາວຊາມາເຣັຽ.[6]ແຕ່ຈົ່ງໄປຫາຝູງແກະທີ່ເສັຽຄືຕະກູນອິສະຣາເອນ;[7]ໃນຂະນະທີ່ພວກທ່ານໄປຈົ່ງປະກາດວ່າ
‘ອານາຈັກສະຫວັນມາໃກ້ແລ້ວ.’
[8]ຈົ່ງຮັກສາຄົນເຈັບໄຂ້ໃຫ້ດີ, ຄົນຕາຍແລ້ວຈົ່ງໃຫ້ເປັນຄືນມາ, ຄົນຂີ້ທູດຈົ່ງໃຫ້ດີສະອາດ, ແລະຈົ່ງຂັບໄລ່ຜີຮ້າຍອອກເສັຽ.
ທ່ານທັງຫລາຍໄດ້ຮັບລ້າ ໆ ຈົ່ງໃຫ້ລ້າ ໆ.[9]ຢ່າເອົາເງິນ, ຫລືຄຳ, ຫລືທອງແດງໃສ່ໄວ້ໃນກະເປົາຂອງທ່ານ.[10]ຢ່ານຳຖົງສິ່ງຂອງໃດໆໄປ,
ຢ່າເອົາເສື້ອສອງໂຕ, ຫລືເກີບ, ຫລືໄມ້ເທົ້າ, ເພາະວ່າຄົນງານກໍສົມຄວນຈະໄດ້ຮັບອາຫານຂອງຕົນ.
[11]ເມື່ອພວກທ່ານເຂົ້າໄປໃນບ້ານໃດຫລືເມືອງໃດກໍຕາມ, ຈົ່ງເບິ່ງວ່າຜູ້ໃດເປັນຜູ້ເຫມາະສົມ ແລະໃຫ້ໄປອາໃສຢູ່ກັບຜູ້ນັ້ນຈົນກວ່າຈະອອກໄປ.
[12]ຂະນະເມື່ອທ່ານເຂົ້າໄປເຮືອນໃດຈົ່ງຄຳນັບໄທເຮືອນນັ້ນ.[13]ຖ້າຄົວເຮືອນນັ້ນສົມຄວນຮັບພຣະພອນ
ກໍໃຫ້ຄວາມສະຫງົບສຸກຂອງທ່ານຢູ່ກັບເຮືອນນັ້ນ ແຕ່ຖ້າຄົວເຮືອນນັ້ນບໍ່ສົມຄວນຮັບພຣະພອນ ກໍໃຫ້ຄວາມສະຫງົບສຸກນັ້ນກັບຄືນມາ-
ສູ່ທ່ານອີກ.
[14]ຖ້າຜູ້ໃດບໍ່ຕ້ອນຮັບພວກທ່ານຫລືບໍ່ຟັງຄຳຂອງທ່ານ, ເມື່ອທ່ານອອກຈາກເຮືອນນັ້ນຫລືເມືອງນັ້ນ, ຈົ່ງສັນຂີ້ຝຸ່ນທີ່ຕິດຕີນຂອງທ່ານອອກເສັຽ.
[15]ເຮົາບອກພວກທ່ານຕາມຄວາມຈິງວ່າ ໃນວັນພິພາກສາໂທດຂອງເມືອງໂຊໂດມ ແລະ ເມືອງໂກໂມຣາ ຈະເບົາກວ່າໂທດຂອງເມືອງນັ້ນ.
[16]ເບິ່ງແມ, ເຮົາໃຊ້ພວກທ່ານໄປເຫມືອນດັ່ງແກະຢູ່ທ່າມກາງຝູງຫມາໄນ, ສະນັ້ນຈົ່ງສະຫລາດເຫມືອນງູ ແລະ ອ່ອນສຸພາບເຫມືອນນົກເຂົາ.
[17]ຣະວັງໃຫ້ດີ! ເພາະເຂົາຈະມອບທ່ານກັບສານສູງ ແລະ ພວກເຂົາຈະຂ້ຽນທ່ານໃນໂຮງທັມະເທສະຫນາຂອງເຂົາ.
[18]ແລ້ວທ່ານຈະຖືກນຳຕົວໄປຫາເຈົ້າເມືອງ ແລະ ກະສັດເພາະເຫັນແກ່ເຮົາ, ເພື່ອໃຫ້ເປັນພະຍານແກ່ພວກເຂົາ ແລະ ແກ່ຄົນຕ່າງຊາດ.
[19]ເມື່ອພວກເຂົາມອບທ່ານໄວ້ນັ້ນ, ຢ່າຄິດອຸກໃຈວ່າຈະເວົ້າຢ່າງໃດຫລືຈະກ່າວອັນໃດ, ເພາະໃນເວລານັ້ນເອງພຣະເຈົ້າຈະຊົງປຣະ-
ທານຄຳເວົ້າໃຫ້ແກ່ທ່ານ.[20]ເພາະບໍ່ແມ່ນພວກທ່ານເອງຈະເປັນຜູ້ກ່າວ ແຕ່ແມ່ນພຣະວິນຍານແຫ່ງພຣະບິ-
ດາເຈົ້າຂອງພວກທ່ານຊົງເປັນຜູ້ກ່າວຜ່ານທ່ານ.
[21]ອ້າຍກັບນ້ອງຕ່າງຄົນກໍຈະມອບເຊິ່ງກັນແລະກັນໃຫ້ເຖິງແກ່ຄວາມຕາຍ, ແລະພໍ່ຈະມອບລູກ. ສ່ວນລູກກໍຈະລຸກຂຶ້ນຕໍ່-
ສູ້ພໍ່ແມ່ໃຫ້ເຖິງແກ່ຄວາມຕາຍ.[22]ທຸກຄົນຈະກຽດຊັງທ່ານເພາະນາມຂອງເຮົາແຕ່ຜູ້ໃດທີ່ອົດທົນໄດ້ເຖິງທີ່ສຸດ, ຜູ້ນັ້ນຈະໄດ້ລອດພົ້ນ.
[23]ເມື່ອເຂົາຂົ່ມເຫັງພວກທ່ານໃນເມືອງຫນຶ່ງ ຈົ່ງຫນີໄປຍັງເມືອງອື່ນ ເພາະເຮົາບອກພວກທ່ານຕາມຄວາມຈິງວ່າ
ພວກທ່ານຈະບໍ່ໄປທົ່ວເມືອງຕ່າງໆທັງໝົດໃນຊາດອິສະຣາເອນ ກ່ອນທີ່ບຸດມະນຸດຈະມາ.
[24]ລູກສິດບໍ່ຫ່ອນໃຫຍ່ກວ່າຄຣູ, ຫຼື ຂ້ອຍໃຊ້ບໍ່ຫ່ອນໃຫຍ່ກວ່ານາຍຂອງຕົນ.
[25]ໃຫ້ສິດສະເຫມີກັບຄຣູ ແລະ ຂ້ອຍໃຊ້ສະເຫມີກັບນາຍຂອງຕົນກໍພໍດີແລ້ວ. ຖ້າເຂົາໄດ້ເອີ້ນເຈົ້າເຮືອນວ່າ ເບເອນເຊບູນ
ເຂົາກໍຈະເອີ້ນໄທເຮືອນຫລາຍກວ່ານັ້ນອີກຫລາຍເທົ່າໃດນໍ!
[26]ສະນັ້ນຈົ່ງຢ່າຢ້ານພວກເຂົາເພາະວ່າບໍ່ມີສິ່ງໃດປົກບັງໄວ້ທີ່ຈະບໍ່ເປີດເຜີຍ, ແລະສິ່ງລັບລີ້ທີ່ບໍ່ປະກົດໃຫ້ຮູ້.[27]ສິ່ງທີ່ເຮົາກ່າວແກ່ພວກທ່ານໃນທີ່ມືດ
ພວກທ່ານຈົ່ງກ່າວໃນທີ່ແຈ້ງ, ແລະ ສິ່ງທີ່ພວກທ່ານໄດ້ຍິນຈາກສຽງຊິມ ຈົ່ງປ່າວປະກາດເທິງຫລັງຄາເຮືອນ.
[28]ຢ່າຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້ ແຕ່ຈົ່ງຢ້ານພຣະເຈົ້າຜູ້ຊົງຣິດທີ່ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບ-
ຫາຍໃນຫມ້ັນະຣົກ.[29]ນົກກະຈອກສອງໂຕຖືກຂາຍລາຄາຫລຽນດຽວບໍ່ແມ່ນບໍ? ເຖິງປານນັ້ນ ນົກນັ້ນແມ່ນແຕ່ໂຕດຽວຈະຕົກລົງດິນກໍບໍ່ໄດ້
ຖ້າພຣະບິດາເຈົ້າຂອງທ່ານບໍ່ຊົງເຫັນຊອບ.[30]ແມ່ນແຕ່ຜົມເທິງຫົວຂອງເຈົ້າກໍຖືກນັບໄວ້ຫມົດທຸກ ເສັ້ນແລ້ວ.
[31]ຢ່າຢ້ານເລີຍພວກທ່ານກໍປະເສີດກວ່ານົກຈອກ. ຫລວງຫລາຍ
[32]ດັ່ງນັ້ນ ທຸກຄົນທີ່ຈະຮັບເຮົາຕໍ່ຫນ້າມະນຸດ ຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາເຈົ້າຂອງເຮົາ ຜູ້ຊົງສະຖິດຢູ່ໃນສະຫວັນ.[33]ແຕ່ຜູ້ທີ່ປະຕິ-
ເສດເຮົາຕໍ່ຫນ້າມະນຸດ ຝ່າຍເຮົາກໍຈະປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາເຈົ້າຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນເຫມືອນກັນ.
[34]ຢ່າຄິດວ່າເຮົາມາເພື່ອຈະນຳຄວາມສະຫງົບສຸກມາສູ່ໂລກ ເຮົາບໍ່ໄດ້ມາເພື່ອນຳຄວາມສະຫງົບສຸກມາໃຫ້, ແຕ່ເຮົານຳດາບມາ.
[35]ເພາະເຮົາມາເພື່ອເຮັດໃຫ້ລູກຊາຍບໍ່ຖືກກັນກັບພໍ່, ແລະລູກຍິງບໍ່ຖືກກັນກັບແມ່, ແລະລູກໃພ້ບໍ່ຖືກກັບແມ່ຍ່າຂອງຕົນ.[36]ຜູ້ທີ່-
ຢູ່ຮ່ວມເຮືອນດຽວກັນກໍຈະເປັນສັດຕຣູຕໍ່ກັນ.
[37]ຜູ້ໃດທີ່ຮັກພໍ່ແມ່ຂອງຕົນຫລາຍກວ່າເຮົາ ຜູ້ນັ້ນກໍບໍ່ສົມຄວນເປັນສາວົກຂອງເຮົາ, ແລະຜູ້ໃດທີ່ຮັກລູກຊາຍ ແລະລູກຍິງຫຼາຍກວ່າເຮົາ
ຜູ້ນັ້ນກໍບໍ່ສົມຄວນເປັນສາວົກຂອງເຮົາ.[38]ຜູ້ໃດບໍ່ຮັບເອົາໄມ້ກາງແຂນຂອງຕົນຕິດຕາມເຮົາມາ ຜູ້ນັ້ນກໍບໍ່ສົມຄວນເປັນສາວົກຂອງເຮົາ.
ຜູ້ທີ່ຈະຮັກຊີວິດຂອງຕົນກໍຕ້ອງເສັຽຊີວິດນັ້ນ.[39]ແຕ່ຜູ້ທີ່ຍອມເສັຽຊີວິດຂອງຕົນ ເພາະເຫັນແກ່ພຣະນາມຂອງເຮົາ ກໍຈະໄດ້ພົບຊີວິດ.
[40]ຜູ້ໃດທີ່ຮັບຕ້ອນພວກທ່ານກໍຮັບຕ້ອນເຮົາ, ແລະຜູ້ໃດທີ່ຮັບຕ້ອນເຮົາກໍຮັບຕ້ອນພຣະອົງຜູ້ຊົງໃຊ້ເຮົາມາ.[41]ແລະ
ຜູ້ທີ່ຮັບຕ້ອນຄົນສິລະທັມເພາະເປັນຄົນສິລະທັມ ກໍຈະໄດ້ບຳເຫນັດເຫມືອນຄົນສິລະທັມ.
[42]ຜູ້ໃດກໍຕາມທີ່ໃຫ້ກັບຜູ້ເລັກນ້ອຍຄົນໃດຄົນຫນຶ່ງໃນນີ້ ເຖິງຈະເປັນພຽງນ້ຳເຢັນຈອກດຽວໄດ້ດື່ມ ເພາະເຂົາເປັນລູກສິດ
ເຮົາບອກຄວາມຈິງກັບທ່ານວ່າ ຜູ້ນັ້ນຈະບໍ່ຂາດບຳເຫນັດຂອງຕົນຈັກເທື່ອ.”


generated on Tue Jun 17 19:01:42 2025

11 1ເມື່ອພຣະເຢຊູເຈົ້າຊົງສັ່ງພວກສາວົກສິບສອງຄົນຂອງຕົນແລ້ວ ພຣະອົງໄດ້ສະເດັດຈາກທີ່ນັ້ນໄປສັ່ງສອນແລະປ່າວປະກາດໃນເມືອງທັງ-
ຫລາຍຂອງພວກເຂົາ.2ໂຢຮັນບັບຕິສະໂຕໄດ້ຍິນຂ່າວກິດຈະການຂອງພຣະຄຣິດຂະນະທີ່ຈຳຈ່ອງໃນຄຸກ, ກໍໄດ້ໃຊ້ລູກສິດບາງຄົນໄປ3ແລະ
ທູນຖາມພຣະອົງວ່າ. “ທ່ານເປັນຜູ້ທີ່ຈະມານັ້ນຫລື, ຫລືຈະຕ້ອງຄອງຖ້າຜູ້ອື່ນ?”

4ຝ່າຍພຣະເຢຊູເຈົ້າຊົງຕອບເຂົາວ່າ, “ຈົ່ງໄປແລະແຈ້ງແກ່ໂຢຮັນຕາມທີ່ທ່ານໄດ້ຍິນ ແລະ ໄດ້ເຫັນ.5ຄົນເປັນເປ້ຽເປັນງ່ອຍກໍຍ່າງໄດ້, ຄົນຂີ້-
ທູດກໍດີສະອາດ, ຄົນຫູຫນວກກໍໄດ້ຍິນ, ຄົນຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ.
6ຜູ້ໃດທີ່ບໍ່ສົງໄສເຮົາກໍເປັນສຸກ.
7ຂະນະທີ່ສິດເຫລົ່ານັ້ນກຳລັງອອກໄປ, ພຣະເຢຊູເຈົ້າຊົງຕັ້ງຕົ້ນກ່າວກັບປະຊາຊົນເຖິງເລື່ອງໂຢຮັນວ່າ, “ທ່ານທັງ-
ຫລາຍໄດ້ອອກໄປໃນປ່າເພື່ອເບິ່ງຫຍັງ ເພື່ອເບິ່ງຕົ້ນອໍ້ໄຫວໄປມາດ້ວຍລົມພັດຫລື?8ໄປເບິ່ງຄົນນຸ່ງຫົ່ມເຄື່ອງລະອຽດອ່ອນນຸ່ມຫລື? ແທ້ຈິງແລ້ວ,
ຄົນທີ່ນຸ່ງຫົ່ມເຄື່ອງລະອຽດອ່ອນນຸ່ມກໍຢູ່ໃນພຣະຣາຊະວັງຂອງກະສັດ.
9ແລ້ວພວກທ່ານອອກໄປເບິ່ງຫຍັງ ໄປເບິ່ງຜູ້ປະກາດພຣະທັມຫລື? ແມ່ນແລ້ວ, ເຮົາບອກທ່ານທັງຫລາຍວ່າ ທ່ານຜູ້ນັ້ນກໍໃຫຍ່ກວ່າຜູ້ປະ-
ກາດພຣະທັມອີກ.10‘ເບິ່ງແມ, ເຮົາໃຊ້ຜູ້ຮັບໃຊ້ຂອງເຮົາໄປກ່ອນຫນ້າທ່ານ, ຜູ້ຮັບໃຊ້ນັ້ນຈະຈັດແຈງຫົນທາງໄວ້ກ່ອນຫນ້າທ່ານ'.
11ເຮົາບອກພວກທ່ານຕາມຄວາມຈິງວ່າ ໃນບັນດາຜູ້ທີ່ເກີດຈາກແມ່ຍິງ ບໍ່ມີຜູ້ໃດໃຫຍ່ກວ່າໂຢຮັນບັບຕິສະໂຕ. ແຕ່ເຖິງຢ່າງນັ້ນ
ຜູ້ນ້ອຍທີ່ສຸດໃນຣາຊະອານາຈັກສະຫວັນກໍໃຫຍ່ກວ່າໂຢຮັນອີກ.12ນັບຕັ້ງແຕ່ຄາວໂຢຮັນບັບຕິສະໂຕເຖິງທຸກວັນນີ້ ຣາຊະອານາຈັກສະ-
ຫວັນກໍເປັນທີ່ຍາດຊິງເອົາຢ່າງຮຸນແຮງ, ແລະຜູ້ທີ່ມີໃຈຮຸນແຮງກໍເປັນຜູ້ຍາດເອົາໄດ້.
13ເພາະວ່າບັນດາຜູ້ປະກາດພຣະທັມ ແລະພຣະບັນຍັດໄດ້ທຳນວາຍມາຈົນເຖິງໂຢຮັນນີ້;14ແລະຖ້າທ່ານຢາກຈະຮັບໄວ້ນັ້ນກໍແມ່ນໂຢຮັນນີ້ແຫລະ
ເປັນເອລີຢາທີ່ຈະມານັ້ນ.15ໃຜມີຫູຟັງກໍຈົ່ງຟັງເອົາເຖີ້ນ.
16ເຮົາຄວນປຽບຄົນສະໄຫມນີ້ຄືກັບຜູ້ໃດ? ປຽບເຫມືອນກັບເດັກນ້ອຍນັ່ງຢູ່ກາງຕະຫລາດ17‘ເຮົາໄດ້ເປົ່າປີ່ໃຫ້ສູ ແຕ່ສູບໍ່ໄດ້ຟ້ອນລຳ,
ເຮົາໄດ້ຮ້ອງໄຫ້ໄວ້ອາລັຍ ແຕ່ສູບໍ່ໄດ້ຮ້ອງໄຫ້.’
18ເພາະວ່າໂຢຮັນໄດ້ມາເພີ່ນບໍ່ກິນຂະຫນົມປັງ ແລະບໍ່ດື່ມເຫລົ້າແວງ, ແລ້ວພວກເຂົາເວົ້າວ່າ ‘ຊາຍຄົນນີ້ມີຜີສິງຢູ່’.19ແລ້ວພວກເຂົາກໍເວົ້າວ່າ
‘ເບິ່ງແມ, ນີ້ເປັນຄົນກິນເກີນສ່ວນແລະມັກເມົາ ເປັນຫມູ່ຂອງຄົນເກັບພາສີແລະຄົນນອກສິນທັມ’ ແຕ່ສະຕິປັນຍາຂອງພຣະເຈົ້າກໍປະກົດວ່າ ຖືກ-
ຕ້ອງແລ້ວດ້ວຍຜົນແຫ່ງສະຕິປັນຍານັ້ນ.”
20ຈາກນັ້ນພຣະເຢຊູເຈົ້າກໍຊົງເລີ່ມວ່າກ່າວເມືອງຕ່າງໆຄືບ່ອນທີ່ພຣະອົງໄດ້ຊົງກະທຳການອັດສະຈັນຫຼາຍຢ່າງແລ້ວນັ້ນ
ເພາະພວກເຂົາບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃຫມ່.21“ວິບັດແກ່ເຈົ້າ, ເມືອງໂຂຣາຊິນ ວິບັດແກ່ເຈົ້າ, ເມືອງເບັດຊາອີດາເອີຍ ເພາະຖ້າການອັດ-
ສະຈັນທີ່ໄດ້ກະທຳໃນທ່າມກາງພວກເຈົ້ານັ້ນ ໄດ້ກະທຳໃນເມືອງຕີເຣ ແລະເມືອງຊີໂດນ ຄົນໃນເມືອງທັງສອງຄົງໄດ້ຖິ້ມໃຈເກົ່າເອົາໃຈໃຫມ່,
ນຸ່ງຫົ່ມຜ້າຫຍາບນັ່ງເທິງຂີ້ເທົ່າແຕ່ດົນນານມາແລ້ວ.22ແຕ່ໃນວັນພິພາກສາ ໂທດຂອງເມືອງຕີເຣ
ແລະເມືອງຊີໂດນກໍຈະເບົາກວ່າໂທດຂອງພວກເຈົ້າ.
23ຝ່າຍເຈົ້າ, ເມືອງກາເປນາອູມເອີຍ ເຈົ້າຄິດວ່າຈະຖືກຍົກຂຶ້ນພຽງຟ້າສະຫວັນຫລື? ບໍ່ເລີຍ ເຈົ້າຈະຕ້ອງລົງໄປເຖິງແດນມໍຣະນາ.
ເພາະຖ້າການອັດສະຈັນທີ່ໄດ້ກະທຳໃນທ່າມກາງເຈົ້ານັ້ນ ຖ້າໄດ້ກະທຳໃນເມືອງໂຊໂດມ ເມືອງນັ້ນຄົງໄດ້ຕັ້ງຢູ່ຈົນເຖິງທຸກວັນນີ້.
24ແຕ່ເຮົາບອກເຈົ້າວ່າໃນວັນພິພາກສາ ໂທດຂອງເມືອງໂຊໂດມຈະເບົາກວ່າໂທດຂອງເຈົ້າ.”
25ໃນເວລານັ້ນພຣະເຢຊູເຈົ້າໄດ້ກ່າວວ່າ, “ຂ້າແດ່ພຣະບິດາເຈົ້າຜູ້ເປັນເຈົ້າສະຫວັນແລະແຜ່ນດິນໂລກ ຂ້ານ້ອຍຂໍສັນລະເສີນພຣະອົງ
ເພາະພຣະອົງຊົງປົກບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຍາແລະຜູ້ທີ່ເຂົ້າໃຈ, ແຕ່ຊົງສະແດງໃຫ້ແກ່ຜູ້ທີ່ບໍ່ໄດ້ຮຽນຮູ້.26ແມ່ນແລ້ວ, ພຣະບິດາເຈົ້າເອີຍ,
ພຣະອົງຊົງເຫັນຊອບດັ່ງນັ້ນ.27ພຣະບິດາເຈົ້າໄດ້ມອບສິ່ງສາຣະພັດໃຫ້ແກ່ເຮົາ. ແລະບໍ່ມີຜູ້ໃດຮູ້ຈັກພຣະບິດາເຈົ້ານອກຈາກພຣະບຸດ
ກັບຜູ້ທີ່ພຣະບຸດປະສົງຈະສຳແດງໃຫ້ຮູ້.
28ຈົ່ງມາຫາເຮົາ, ບັນດາຜູ້ທີ່ເຮັດການຫນັກຫນ່ວງແລະແບກພາລະຫນັກ ແລ້ວເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ.
29ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດ-
ໃຈຂອງທ່ານຈະໄດ້ພົບຄວາມສະຫງົບ.30ດ້ວຍວ່າແອກຂອງເຮົາກໍພໍເຫມາະ ແລະ ພາລະຂອງເຮົາກໍເບົາ."


generated on Tue Jun 17 19:01:42 2025

12 [1]ໃນເວລານັ້ນ ພຣະເຢຊູເຈົ້າໄດ້ສະເດັດຜ່ານທົ່ງນາໄປໃນວັນສະບາໂຕ ສ່ວນພວກສິດຂອງພຣະອົງກໍຫິວເຂົ້າ ຈຶ່ງຕັ້ງ-
ຕົ້ນເດັດເອົາຮວງເຂົ້າມາແກະກິນ.[2]ແຕ່ເມື່ອພວກຟາຣີຊາຍເຫັນດັ່ງນັ້ນ ຈຶ່ງທູນພຣະອົງວ່າ, “ເບິ່ງແມ,
ພວກສິດຂອງທ່ານເຮັດຜິດຕໍ່ກົດຂອງວັນສະບາໂຕ.”

[3]ແຕ່ພຣະເຢຊູເຈົ້າຊົງກ່າວແກ່ເຂົາວ່າ, “ພວກທ່ານຍັງບໍ່ໄດ້ອ່ານຫລື ຕອນທີ່ດາວິດ ແລະ ພັກພວກອຶດຫິວນັ້ນ?[4]ດາ-
ວິດໄດ້ເຂົ້າໄປໃນພຣະວິຫານທີ່ສະຖິດຂອງພຣະເຈົ້າ ແລະ ໄດ້ກິນເຂົ້າຈີ່ທີ່ຕັ້ງຖວາຍແກ່ພຣະເຈົ້າ
ຊຶ່ງທ່ານແລະພັກພວກບໍ່ມີສິດຈະກິນເຂົ້າຈີ່ນັ້ນເຊິ່ງມີແຕ່ປະໂລຫິດພວກດຽວທີ່ສາມາດກິນເຂົ້າຈີ່ນັ້ນ
[5]ແລ້ວພວກທ່ານບໍ່ໄດ້ອ່ານໃນພຣະບັນຍັດຫລືທີ່ວ່າ ທຸກວັນສະບາໂຕພວກປະໂລຫິດເຄີຍລະເມີດຕໍ່ກົດວັນສະບາໂຕແຕ່ບໍ່ມີຄວາມຜິດ?
[6]ແຕ່ເຮົາບອກພວກທ່ານວ່າ ຜູ້ທີ່ຍິ່ງໃຫຍ່ກວ່າພຣະວິຫານກໍຢູ່ທີ່ນີ້ແລ້ວ.
[7]ຖ້າພວກທ່ານໄດ້ເຂົ້າໃຈຄວາມຫມາຍຂອງພຣະຄັມພີທີ່ວ່າ, ‘ເຮົາປະສົງຄວາມເມດຕາບໍ່ປະສົງເຄື່ອງບູຊາ,’
ທ່ານກໍຄົງຈະບໍ່ກ່າວໂທດໃສ່ຄົນທີ່ບໍ່ມີຄວາມຜິດ;[8]ເພາະບຸດມະນຸດຄືອົງພຣະຜູ້ເປັນເຈົ້າຂອງວັນສະບາໂຕ.”
[9]ຈາກນັ້ນພຣະເຢຊູເຈົ້າໄດ້ສະເດັດອອກຈາກທີ່ນັ້ນແລະເຂົ້າໄປໃນໂຮງທັມະສາລາຂອງພວກເຂົາ.[10]ເບິ່ງແມ,
ຢູ່ທີ່ນັ້ນມີຄົນມືລີບເບື້ອງຫນຶ່ງຄົນຢາກຫາຂໍ້ຟ້ອງພຣະເຢຊູເຈົ້າ ດັ່ງນັ້ນເຂົາຈຶ່ງທູນພຣະອົງວ່າ, “ຄວນຫລືຈະເຮັດໃຫ້ດີພະຍາດໃນວັນສະບາ-
ໂຕ?”
[11]ພຣະເຢຊູຊົງຕອບເຂົາວ່າ, “ມີຜູ້ໃດໃນພວກທ່ານ ຖ້າມີແກະໂຕດຽວ ແລະແກະໂຕນັ້ນຕົກຂຸມໃນວັນສະບາໂຕ
ແລ້ວຜູ້ນັ້ນຈະບໍ່ພະຍາຍາມດຶງມັນຂຶ້ນມາຈາກຂຸມຫລື?[12]ດ້ວຍເຫດນັ້ນ ຈຶ່ງອະນຸຍາດໃຫ້ເຮັດການດີໃນວັນສະບາໂຕ
ໂດຍຖືວ່າຖືກຕ້ອງຕາມກົດບັນຍັດ.”
[13]ແລ້ວພຣະອົງຊົງບອກຄົນມືລີບວ່າ, “ຈົ່ງຢຽດມືຂອງເຈົ້າອອກ.” ຄົນນັ້ນກໍຢຽດມືອອກ ແລ້ວມືນັ້ນກໍດີປົກກະຕິເຫມືອນມືອີກເບື້ອງຫນຶ່ງ.
[14]ຝ່າຍພວກຟາຣີຊາຍຈຶ່ງອອກໄປປຶກສາກັນເຖິງເລື່ອງພຣະອົງວ່າ ຈະເຮັດຢ່າງໃດຈຶ່ງຈະຂ້າພຣະອົງໄດ້.
[15]ເມື່ອພຣະເຢຊູເຈົ້າຊົງຮູ້ເລື່ອງນີ້ ພຣະອົງຊົງສະເດັດອອກໄປຈາກທີ່ນັ້ນ. ປະຊາຊົນຫລວງຫລາຍກໍຕິດຕາມພຣະອົງໄປ, ພຣະ-
ອົງກໍຊົງໂຜດໃຫ້ເຂົາດີພະຍາດທຸກຄົນ.[16]ພຣະອົງໄດ້ສັ່ງຫ້າມພວກເຂົາຢ່າງເດັດຂາດບໍ່ໃຫ້ບອກເລື່ອງກ່ຽວກັບ ພຣະອົງສູ່ຜູ້ໃດຟັງ,
[17]ກໍເພື່ອຈະໃຫ້ສຳເລັດຕາມຖ້ອຍຄຳ ຂອງຜູ້ທຳນວາຍ ເອຊາຢາໄດ້ກ່າວໄວ້ວ່າ,
[18]“ນີ້ແມ່ນ, ຜູ້ຮັບໃຊ້ທີ່ເຮົາໄດ້ເລືອກໄວ້ ຜູ້ເປັນທີ່ຮັກແລະຊອບໃຈຂອງເຮົາ. ເຮົາຈະເອົາວິນຍານຂອງເຮົາໃສ່ໄວ້ເທິງເພິ່ນ.
ເພື່ອຈະປະກາດຄວາມຍຸຕິທັມແກ່ບັນດາຄົນຕ່າງຊາດ.
[19]ເພິ່ນຈະບໍ່ກໍການວິວາດຜິດຖຽງແລະບໍ່ຮ້ອງສຽງດັງ; ບໍ່ມີໃຜຈະໄດ້ຍິນສຽງຂອງເພິ່ນຕາມຖະຫນົນ;[20]ທ່ານຈະບໍ່ຫັກຕົ້ນອໍ້ທີ່ບວບຊ້ຳ
ເພິ່ນຈະບໍ່ຫັກໃສ້ຕະກຽງເປັນຄວັນ ຈວນຈະມອດເພິ່ນຈະບໍ່ມອດ ຈົນກວ່າເພິ່ນຈະໄດ້ນຳຄວາມຍຸຕິທັມໃຫ້ມີຊັຍຊະນະ.
[21]ໃນນາມຂອງເພິ່ນບັນດາປະຊາຊາດຈະມີຄວາມຫວັງ.
[22]ເມື່ອນັ້ນເຂົາໄດ້ພາຄົນຕາບອດແລະປາກກືກ ພ້ອມກັບຜູ້ຫນຶ່ງທີ່ມີຜີຮ້າຍເຂົ້າສິງຢູ່ ມາຫາພຣະເຢຊູເຈົ້າ. ພຣະອົງຊົງໂຜດໃຫ້
ຊາຍຄົນນັ້ນດີປົກກະຕິ, ແລະຜົນຄືຊາຍຄົນປາກກືກສາມາດເວົ້າໄດ້ ແລະ ເບິ່ງເຫັນໄດ້.[23]“ຄົນນີ້ເປັນເຊື້ອສາຍຂອງກະສັດດາວິດບໍ່ແມ່ນຫລື?”
[24]ເມື່ອໄດ້ຍິນດັ່ງນັ້ນກໍເວົ້າກັນວ່າ, “ຜູ້ນີ້ຂັບໄລ່ຜີອອກໄດ້ໂດຍໃຊ້ອຳນາດເບເອນເຊບູນຄືນາຍຜີນັ້ນ.”[25]ແຕ່ພຣະ-
ເຢຊູຊົງຮູ້ຄວາມຄິດຂອງເຂົາຈຶ່ງຊົງກ່າວແກ່ເຂົາວ່າ, “ອານາຈັກໃດ ທີ່ແບ່ງແຍກກັນເອງ ແລ້ວກໍຄົງຈິບຫາຍ, ແລະທຸກເມືອງໃດຫລືເຮືອນໃດ
ທີ່ແບ່ງແຍກກັນເອງແລ້ວຈະຕັ້ງຫມັ້ນຢູ່ບໍ່ໄດ້.
[26]ຖ້າຊາຕານຂັບໄລ່ຊາຕານອອກເອງ ມັນກໍແຕກແຍກກັນໃນຕົວມັນເອງ ແລ້ວອານາຈັກຂອງມັນຈະຕັ້ງຫມັ້ນໄດ້ຢ່າງໃດ?
[27]ແລະຖ້າເຮົາຂັບໄລ່ຜີອອກດ້ວຍອຳນາດເບເອນເຊບູນ ພວກລູກຫລານຂອງທ່ານທັງຫລາຍເຄີຍຂັບມັນອອກດ້ວຍອຳນາດຂອງຜູ້ໃດ?
ດ້ວຍເຫດນີ້ແຫລະ, ເຂົາຈະເປັນຜູ້ຕັດສິນພວກທ່ານ.
[28]ແຕ່ຖ້າເຮົາຂັບໄລ່ຜີມານຮ້າຍອອກດ້ວຍພຣະວິນຍານຂອງພຣະເຈົ້າເຊັ່ນນີ້ຣາຊະອານາຈັກຂອງພຣະເຈົ້າກໍມາເຖິງພວກທ່ານ.
[29]ແລ້ວບໍ່ມີໃຜຈະເຂົ້າໄປປຸ້ນເອົາຊັບໃນເຮືອນຂອງຄົນແຂງແຮງໄດ້ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້ເສັຽກ່ອນ?
ແລ້ວເຈິ່ງປຸ້ນເອົາຊັບໃນເຮືອນຂອງເພິ່ນໄດ້.[30]ຜູ້ທີ່ບໍ່ຢູ່ຝ່າຍເຮົາກໍຕໍ່ສູ້ກັບເຮົາແລະຜູ້ທີ່ບໍ່ໂຮມເຂົ້າກັບເຮົາກໍເປັນຜູ້ເຮັດໃຫ້ແຕກກະຈາຍໄປ.
[31]ດ້ວຍເຫດນີ້ເຮົາບອກພວກທ່ານວ່າ, ຄວາມຜິດບາບແລະຄວາມຫມິ່ນປະຫມາດທຸກຢ່າງຈະຊົງໂຜດອະພັຍໃຫ້ມະນຸດໄດ້, ແຕ່ຄຳຫມິ່ນປະ-
ຫມາດພຣະວິນຍານຈະຊົງໂຜດອະພັຍໃຫ້ບໍ່ໄດ້.[32]ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ບຸດມະນຸດ ກໍຍັງຊົງໂຜດໃຫ້ອະພັຍແກ່ຜູ້ນັ້ນໄດ້
ແຕ່ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ພຣະວິນຍານບໍຣິສຸດເຈົ້າ, ກໍຈະບໍ່ໂຜດອະພັຍໃຫ້ແກ່ຜູ້ນັ້ນ ທັງໃນໂລກນີ້ແລະໃນໂລກທີ່ຈະມາເຖິງ.
[33]ຫາກເປັນຕົ້ນໄມ້ດີ ຜົນມັນຈຶ່ງດີ, ຫລື ຖ້າຕົ້ນໄມ້ບໍ່ດີ ຜົນມັນກໍບໍ່ດີ ເພາະວ່າຈະໄດ້ຮູ້ຈັກຕົ້ນໄມ້ດ້ວຍຫມາກຜົນຂອງມັນ.[34]ພວກຊາດງູຮ້າຍເອີຍ,
ເນື່ອງຈາກພວກຜູ້ຊົ່ວແລ້ວຈະເວົ້າຄວາມດີໄດ້ຢ່າງໃດ? ດ້ວຍວ່າໃຈເຕັມລົ້ນດ້ວຍສິ່ງໃດ ປາກກໍເວົ້າຕາມສິ່ງນັ້ນ.
[35]ຄົນດີກໍເອົາສິ່ງທີ່ດີອອກມາຈາກຄັງແຫ່ງຄວາມດີ ເພາະໃຈຂອງເຂົາກໍເກີດຜົນທີ່ດີ, ແລະ ຄົນຊົ່ວນັ້ນ
ກໍເອົາສິ່ງທີ່ຊົ່ວອອກມາຈາກຄັງແຫ່ງຄວາມຊົ່ວຂອງຕົນ ດ້ວຍໃຈຂອງລາວກໍມີແຕ່ສິ່ງທີ່ຊົ່ວຮ້າຍ.
[36]ເຮົາບອກພວກທ່ານວ່າໃນວັນພິພາກສາ ມະນຸດຈະຕ້ອງໃຫ້ການເພາະຖ້ອຍຄຳເປົ່າປະໂຫຍດທຸກຄຳທີ່ພວກເຂົາເວົ້າອອກໄປ.
[37]ເພາະດ້ວຍຖ້ອຍຄຳຂອງທ່ານ ທີ່ທ່ານຈະຖືກຕັດສິນ, ແລະ ທ່ານຈະຕ້ອງຖືກກ່າວໂທດ ກໍດ້ວຍຖ້ອຍຄຳຂອງຕົນເອງ.”
[38]ຈາກນັ້ນມີບາງຄົນໃນພວກນັກທັມແລະພວກຟາຣີຊາຍສວນຕອບພຣະອົງວ່າ, “ອາຈານເອີຍ, ພວກຂ້ານ້ອຍຢາກເຫັນຫມາຍສຳ-
ຄັນຈາກທ່ານ.”[39]“ຄົນສະໄຫມຄວາມຊົ່ວແລະລ່ວງປະເວນີ ມັກສະແຫວງຫາຫມາຍສຳຄັນໃດທີ່ຈະໃຫ້ແກ່ເຂົາ ເວັ້ນແຕ່ຫມາຍສຳຄັນຂອງໂຢ-
ນາຜູ້ປະກາດພຣະທັມ.[40]ເພາະໂຢນາໄດ້ຢູ່ໃນທ້ອງປາໃຫຍ່ເປັນເວລາສາມວັນສາມຄືນສັນໃດ ບຸດມະນຸດຈະຢູ່ໃນພື້ນຂອງແຜ່ນ-
ດິນໂລກສາມວັນສາມຄືນສັນນັ້ນ.
[41]ຊາວເມືອງນີເນເວຈະຢືນຂຶ້ນໃນວັນພິພາກສາ ພ້ອມກັບຄົນສະໄຫມນີ້ແລະຈະກ່າວໂທດໃສ່ເຂົາ. ເພາະພວກຊາວເມືອງນີເນ-
ເວໄດ້ຖິ້ມໃຈເກົ່າເອົາໃຈໃຫມ່ເພາະຄຳປະກາດຂອງໂຢນາ, ແລະ ເບິ່ງແມ, ທີ່ນີ້ຍັງມີຜູ້ຫນຶ່ງ, ທີ່ຍິ່ງໃຫຍ່ກວ່າໂຢນາ.

[42]ຣາຊີນີຝ່າຍທິດໃຕ້ຈະລຸກຂຶ້ນໃນວັນພິພາກສາພ້ອມກັບຄົນຈາກຍຸກນີ້ ແລະກ່າວໂທດໃສ່ພວກເຂົາ.
ເພາະນາງໄດ້ສະເດັດມາແຕ່ທີ່ສຸດໂລກເພື່ອຈະຊົງຟັງພຣະສະຕິປັນຍາຂອງກະສັດໂຊໂລໂມນ, ແລະເບິ່ງແມ, ຊຶ່ງໃຫຍ່ກວ່າກະສັດໂຊໂລ-
ໂມນກໍມີຢູ່ທີ່ນີ້ແລ້ວ.
[43]ເມື່ອຜີຖ່ອຍຮ້າຍອອກມາຈາກຜູ້ໃດແລ້ວ ມັນກໍທ່ຽວໄປໃນບ່ອນກັນດານນ້ຳ ແລະສະແຫວງຫາບ່ອນເຊົາເມື່ອຍ ແຕ່ມັນບໍ່ພົບ.[44]ແລ້ວມັນເວົ້າວ່າ
‘ເຮົາຈະຕ່າວຄືນໄປຍັງເຮືອນທີ່ເຮົາໄດ້ອອກມານັ້ນ.’ ເມື່ອມັນມາເຖິງກໍເຫັນວ່າເຮືອນນັ້ນເປົ່າຫວ່າງກວາດກ້ຽງ ແລະຕົບແຕ່ງໄວ້ແລ້ວຢ່າງດີ.
[45]ແລ້ວມັນຈຶ່ງໄປຮັບເອົາຜີອື່ນອີກເຈັດໂຕຮ້າຍກວ່າມັນເອງ ແລະພວກມັນທັງຫມົດກໍເຂົ້າໄປອາໃສຢູ່ທີ່ນັ້ນ ແລະສະພາບບັ້ນ-
ປາຍຂອງຄົນນັ້ນກໍຮ້າຍກວ່າບັ້ນຕົ້ນ. ຄົນສະໄຫມຊົ່ວນີ້ກໍຈະເປັນຢ່າງນັ້ນແຫລະ.”
[46]ຂະນະທີ່ພຣະເຢຊູເຈົ້າກຳລັງຊົງກ່າວກັບປະຊາຊົນຢູ່ນັ້ນ, ເບິ່ງແມ, ມານດາກັບພວກນ້ອງຊາຍຂອງພຣະອົງກໍຢືນຢູ່ຂ້າງນອກ, ຫາໂອ-
ກາດຈະເວົ້າກັບພຣະອົງ. ມີຄົນຫນຶ່ງທູນພຣະອົງວ່າ,[47]“ເບິ່ງແມ, ມານດາກັບພວກນ້ອງຊາຍຂອງທ່ານຢືນຢູ່ຂ້າງນອກ ຫາໂອ-
ກາດຈະເວົ້າກັບທ່ານ.”
[48]ແຕ່ພຣະອົງຊົງກ່າວກັບຜູ້ທີ່ມາທູນນັ້ນວ່າ “ໃຜເປັນມານດາແລະໃຜເປັນນ້ອງຊາຍຂອງເຮົາ.”[49]ແລະຊົງກ່າວວ່າ, “ນີ້ແຫລະ,
ຄືມານດາແລະນ້ອງຊາຍຂອງເຮົາ.[50]ເພາະຜູ້ໃດຈະເຮັດຕາມນ້ຳພຣະທັຍພຣະບິດາຂອງເຮົາຜູ້ຊົງສະຖິດໃນສະຫວັນ,
ຜູ້ນັ້ນແຫລະເປັນນ້ອງຊາຍ, ເປັນນ້ອງສາວ, ແລະເປັນມານດາຂອງເຮົາ.”


generated on Tue Jun 17 19:01:42 2025

13 [1]ໃນວັນນັ້ນພຣະເຢຊູເຈົ້າໄດ້ສະເດັດອອກຈາກເຮືອນໄປປະທັບຢູ່ແຄມຝັ່ງ ທະເລ.[2]ປະຊາຊົນຢ່າງຫລວງຫລາຍ
ໄດ້ມາເຕົ້າໂຮມກັນອ້ອມພຣະອົງຈົນພຣະອົງຕ້ອງ ຂຶ້ນຂີ່ເຮືອ ແລະ ປ່ອຍໃຫ້ປະຊາຊົນຢືນຢູ່ທີ່ແຄມຝັ່ງ.

[3]ແລ້ວພຣະເຢຊູຊົງກ່າວກັບເຂົາຫລາຍປະການເປັນຄຳອຸປະມາ ພຣະອົງກ່າວວ່າ, “ເບິ່ງແມ, ມີຄົນຫນຶ່ງອອກໄປຫວ່ານພືດ.[4]ເມື່ອກຳ-
ລັງຫວ່ານຢູ່ນັ້ນບາງເມັດກໍຕົກຕາມທາງ, ແລະ ນົກກໍມາກິນເສັຽ.[5]ບາງເມັດກໍຕົກໃສ່ບ່ອນຫີນຫລາຍດິນຫນ້ອຍ,
ຈຶ່ງງອກຂຶ້ນໂລດເພາະດິນບໍ່ເລິກ.[6]ແຕ່ເມື່ອຕາເວັນຂຶ້ນມາກໍແຫ້ມ ເພາະບໍ່ມີຮາກ, ແລະ ພວກມັນຈຶ່ງຄ່ອຍໆຫ່ຽວແຫ້ງໄປ.
[7]ບາງເມັດອື່ນກໍຕົກກາງພຸ່ມຫນາມ ໆ ກໍປົ່ງຂຶ້ນຫຸ້ມຮັດເສັຽ.[8]ບາງເມັດກໍຕົກໃສ່ດິນດີແລ້ວກໍເກີດຜົນເມັດຫນຶ່ງຮ້ອຍເທົ່າ, ເມັດຫນຶ່ງຫົກສິບເທົ່າ,
ເມັດຫນຶ່ງສາມສິບເທົ່າ.[9]ຜູ້ໃດມີຫູຟັງ ຈົ່ງຟັງເອົາ.”
[10]ພວກສາວົກຈຶ່ງມາ ແລະ ທູນກັບພຣະອົງວ່າ, “ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັນຄຳອຸປະມາ?”[11]ພຣະເຢຊູຊົງຕອບເຂົາວ່າ,
“ທ່ານທັງຫຼາຍໄດ້ຮັບສິດທິພິເສດທີ່ຈະເຂົ້າໃຈເຖິງຂໍ້ຄວາມເລິກລັບເລື່ອງຣາຊະອານາຈັກສະຫວັນ, ແຕ່ຄົນເຫລົ່ານັ້ນບໍ່ຊົງໂຜດໃຫ້ຮູ້.
[12]ດ້ວຍວ່າຜູ້ໃດມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ແກ່ຜູ້ນັ້ນອີກ, ແຕ່ຜູ້ນັ້ນຈະມີບໍຣິບູນ, ແຕ່ຜູ້ທີ່ບໍ່ມີນັ້ນ
ເຖິງແມ່ນສິ່ງທີ່ຕົນມີຢູ່ກໍຈະຊົງຍົກເອົາໄປຈາກຜູ້ນັ້ນເສັຽ.
[13]ດ້ວຍເຫດນີ້, ເຮົາຈຶ່ງກ່າວແກ່ເຂົາເປັນຄຳອຸປະມາ: ເພາະເມື່ອເຂົາເບິ່ງກໍບໍ່ໄດ້ເຫັນ; ເມື່ອເຂົາຟັງກໍບໍ່ໄດ້ຍິນ, ຫລື ບໍ່ເຂົ້າໃຈ.[14]ຄຳທຳ-
ນວາຍຂອງເອຊາຢາກໍຖືກຕ້ອງກັບເຂົາ ຄືຄຳທີ່ວ່າ, ‘ເຈົ້າທັງຫລາຍຈະໄດ້ຍິນ, ແຕ່ຈະບໍ່ເຂົ້າໃຈຈັກເທື່ອ; ເມື່ອເບິ່ງເຈົ້າກໍຈະເຫັນ,
ແຕ່ທ່ານຈະບໍ່ໄດ້ສັງເກດຈັກເທື່ອ.
[15]ເພາະຫົວໃຈຂອງປະຊາຊົນນີ້ກໍດ້ານຊາ, ຫູກໍຫນັກ, ຕາຂອງເຂົາກໍຫລັບເສັຽ, ດັ່ງນັ້ນ ພວກເຂົາຈະເບິ່ງບໍ່ເຫັນດ້ວຍຕາຕົນເອງ,
ຫລືໄດ້ຍິນດ້ວຍຫູ ຫລືຮູ້ດ້ວຍໃຈຂອງພວກເຂົາ, ບໍ່ດັ່ງນັ້ນແລ້ວພວກເຂົາຈະຕ່າວກັບມາ ແລະ ເຮົາຈະຊົງໂຜດຮັກສາໃຫ້ເຂົາດີ’.
[16]ແຕ່ດວງຕາຂອງພວກທ່ານກໍເປັນພອນ, ເພາະໄດ້ເຫັນ ແລະ ຫູຂອງພວກທ່ານກໍໄດ້ຮັບພຣະພອນ ພວກທ່ານໄດ້ຍິນ.
[17]ເຮົາບອກຄວາມຈິງກັບພວກທ່ານວ່າ ບັນດາຜູ້ປະກາດພຣະທັມ ແລະ ບັນດາຜູ້ມີສີລະທັມຫລາຍຄົນ ປຣາຖນາຢາກເຫັນ,
ຊຶ່ງພວກທ່ານເຫັນຢູ່ນີ້ ແຕ່ເຂົາບໍ່ໄດ້ເຫັນ. ພວກເຂົາປຣາຖະນາຢາກໄດ້ຍິນຊຶ່ງພວກທ່ານໄດ້ຍິນ, ແຕ່ບໍ່ໄດ້ຍິນ.
[18]ຈົ່ງຟັງຄຳອຸປະມາເລື່ອງຜູ້ຫວ່ານພືດນັ້ນ.[19]ເມື່ອຜູ້ໃດກໍຕາມໄດ້ຍິນພຣະທັມເລື່ອງຣາຊະອານາຈັກນັ້ນ ແຕ່ບໍ່ເຂົ້າໃຈໃນພຣະທັມນັ້ນ,
ມານຮ້າຍມາ ແລະ ຍາດເອົາພຣະທັມທີ່ຫວ່ານໃສ່ໃນໃຈຄົນນັ້ນໄປເສັຽ. ນີ້ຄືເມັດພັນທີ່ຫວ່ານຕົກລົງຕາມແຄມທາງ.
[20]ເມັດທີ່ຫວ່ານຕົກໃນບ່ອນມີຫີນຫລາຍນັ້ນ ໄດ້ແກ່ຄົນທີ່ໄດ້ຍິນພຣະທັມ ແລ້ວກໍຮັບເອົາທັນທີດ້ວຍຄວາມຍິນດີ.[21]ແຕ່ບໍ່ມີຮາກໃນຕົວເອງ ແລະ
ເຂົາຈຶ່ງທົນຢູ່ຊົ່ວຄາວ ເມື່ອເກີດຄວາມຍາກລຳບາກ ຫລື ການຂົ່ມເຫັງເພາະພຣະທັມນັ້ນ ຕົນກໍສະດຸດທໍ້ຖອຍໃຈເສັຽທັນທີ.
[22]ເມັດທີ່ຫວ່ານຕົກກາງພຸ່ມຫນາມ, ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທັມ ແຕ່ຍັງກັງວົນຕໍ່ຊີວິດໃນໂລກນີ້ ແລະ ຄວາມຫລອກລວງໃນຊັບສົມບັດ
ໄດ້ຫຸ້ມຮັດພຣະທັມນັ້ນເສັຽ ແລະ ເຂົາຈຶ່ງບໍ່ເກີດຜົນ.[23]ໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມ ແລະ ເຂົ້າໃຈ. ຜູ້ນັ້ນກໍເກີດຜົນ ແລະ ພັດທະນາຂຶ້ນ,
ບາງຄົນເກີດຜົນຮ້ອຍເທົ່າ, ຫົກສິບເທົ່າ, ແລະ ສາມສິບເທົ່າ.”
[24]ພຣະເຢຊູເຈົ້າຊົງກ່າວຄຳອຸປະມາອີກເລື່ອງຫນຶ່ງໃຫ້ເຂົາທັງຫລາຍຟັງວ່າ, “ຣາຊະອານາຈັກສະຫວັນ
ປຽບເຫມືອນຊາຍຜູ້ຫນຶ່ງທີ່ຫວ່ານພືດເມັດດີໃນນາຂອງຕົນ.[25]ແຕ່ເມື່ອຄົນທັງຫລາຍກຳລັງນອນຫລັບຢູ່ ສັດຕຣູຂອງຜູ້ນັ້ນມາຫວ່ານເຂົ້າ-
ນົກໃສ່ທ່າມກາງເຂົ້າດີ ແລ້ວກໍຫນີຈາກໄປເສັຽ.[26]ເມື່ອຕົ້ນເຂົ້າງອກອອກດອກເປັນຮວງແລ້ວ ເຂົ້ານົກກໍປະກົດຂຶ້ນເຫມືອນກັນ.
[27]ພວກຂ້ອຍໃຊ້ຂອງເຈົ້າເຮືອນມາແຈ້ງຄວາມແກ່ນາຍວ່າ, ‘ນາຍເອີຍ, ທ່ານໄດ້ຫວ່ານເຂົ້າດີໃນນາຂອງທ່ານບໍ່ແມ່ນບໍ? ເພາະເຫດໃດຈຶ່ງມີເຂົ້າ-
ນົກເກີດຂຶ້ນ?’[28]ຝ່າຍນາຍຈຶ່ງຕອບວ່າ ‘ສັດຕຣູໄດ້ກະທຳສິ່ງນີ້’ ພວກຂ້ອຍໃຊ້ຈຶ່ງຖາມນາຍວ່າ ‘ທ່ານຢາກໃຫ້ຫມູ່ຂ້ານ້ອຍໄປຫລົກເຂົ້າ-
ນົກນັ້ນອອກຫລືບໍ່?’
[29]ນາຍຈຶ່ງຕອບວ່າ ‘ບໍ່ຕ້ອງ. ເພາະເມື່ອພວກເຈົ້າຫລົກເຂົ້ານົກນັ້ນຢ້ານຈະຫລົກເຂົ້າດີດ້ວຍ.[30]ປະໃຫ້ເຂົ້າທັງສອງໃຫຍ່ຂຶ້ນດ້ວຍກັນຈົນເຖິງຣະ-
ດູເກັບກ່ຽວ ໃນເວລາເກັບກ່ຽວນັ້ນເຮົາຈະສັ່ງພວກກ່ຽວວ່າ, ຈົ່ງກ່ຽວເຂົ້ານົກກ່ອນ, ມັດເປັນຝ່ອນເຜົາໄຟເສັຽ
ສ່ວນເຂົ້າດີນັ້ນຈົ່ງໂຮມໄວ້ໃນເລົ້າຂອງເຮົາ’.”
[31]ຈາກນັ້ນພຣະເຢຊູເຈົ້າຊົງກ່າວຄຳອຸປະມາອີກເລື່ອງຫນຶ່ງໃຫ້ເຂົາຟັງວ່າ, “ຣາຊະອານາຈັກສະຫວັນປຽບເຫມືອນແກ່ນຜັກກາດເມັດຫນຶ່ງ
ທີ່ຄົນຜູ້ຫນຶ່ງນຳເອົາໄປຫວ່ານໃນສວນຂອງຕົນ.[32]ເມັດນັ້ນນ້ອຍກວ່າເມັດທັງປວງ. ແຕ່ເມື່ອງອກຂຶ້ນແລ້ວກໍໃຫຍ່ກວ່າຜັກອື່ນໃນສວນ,
ກາຍເປັນຕົ້ນໄມ້ຈົນວ່ານົກປ່າໄດ້ມາເຮັດຮັງອາໃສຢູ່ຕາມກິ່ງກ້ານມັນທັງຫລາຍ.”
[33]ພຣະເຢຊູເຈົ້າຊົງກ່າວຄຳອຸປະມາອີກເລື່ອງຫນຶ່ງໃຫ້ເຂົາຟັງວ່າ, “ຣາຊະອານາຈັກສະຫວັນປຽບເຫມືອນເຊື້ອແປ້ງ ທີ່ຜູ້-
ຍິງຄົນຫນຶ່ງເອົາປົນໃສ່ໃນແປ້ງສາມຜອງ ຈົນແປ້ງນັ້ນຟູຂຶ້ນທັງຫມົດ.”
[34]ຂໍ້ຄວາມເຫລົ່ານີ້ພຣະເຢຊູເຈົ້າຊົງກ່າວແກ່ປວງຊົນເປັນຄຳອຸປະມາທັງຫມົດ; ແລະນອກຈາກຄຳອຸປະມາພຣະອົງບໍ່ໄດ້ຊົງກ່າວກັບເຂົາຈັກປະ-
ການ.[35]ເພື່ອຈະໃຫ້ສຳເລັດຕາມທີ່ຊົງກ່າວໄວ້ດ້ວຍຜູ້ປະກາດພຣະທັມວ່າ,
“ເຮົາຈະອ້າປາກອອກເປັນຄຳອຸປະມາເຮົາຈະບອກຂໍ້ຄວາມທີ່ປິກອຳໄວ້ ຕັ້ງແຕ່ຕົ້ນເດີມສ້າງໂລກ.”
[36]ຈາກນັ້ນພຣະເຢຊູເຈົ້າໄດ້ສະເດັດໄປຈາກຄົນເຫລົ່ານັ້ນ ແລະສະເດັດເຂົ້າໄປໃນເຮືອນ. ພວກສາວົກມາເຝົ້າພຣະອົງ ແລະ ທູນວ່າ,
“ຂໍທ່ານໂຜດອະທິບາຍໃຫ້ພວກຂ້ານ້ອຍເຂົ້າໃຈຄຳອຸປະມາເລື່ອງເຂົ້ານົກໃນນານັ້ນແດ່.”[37]“ຜູ້ຊາຍຫວ່ານເມັດດີນັ້ນຄືບຸດມະນຸດ.
[38]ທົ່ງນານັ້ນຄືແຜ່ນດິນໂລກ; ແລະ ເມັດດີນັ້ນໄດ້ແກ່ພົນລະເມືອງແຫ່ງຣາຊະອານາຈັກຂອງພຣະເຈົ້າ. ເຂົ້າ-
ນົກໄດ້ແກ່ພົນລະເມືອງຂອງມານຮ້າຍ.[39]ແລະ ສັດຕຣູຜູ້ຫວ່ານເຂົ້ານົກຄືມານຊາຕານ. ລະດູເກັບກ່ຽວໄດ້ແກ່ຄາວສຸດໂລກ ແລະ ຜູ້-
ເກັບກ່ຽວນັ້ນຄືຝູງເທວະດາ.
[40]ເຫດສັນນັ້ນ, ເມື່ອໄດ້ຮວບຮວມເກັບເຂົ້ານົກ ແລະ ເຜົາໄຟເສັຽແລ້ວ ກໍຈະເຖິງຄາວສຸດໂລກນີ້.[41]ບຸດມະນຸດຈະໃຊ້ພວກເທວະ-
ດາຂອງພຣະອົງອອກໄປ, ແລະ ພວກເພິ່ນຈະເກັບກວາດສິ່ງເຫລົ່ານີ້ອອກຈາກຣາຊະອານາຈັກຂອງພຣະອົງ
ໃນທຸກສິ່ງທີ່ເປັນເຫດເກີດຈາກຄວາມບາບ, ແລະ ກັບບັນດາຜູ້ທີ່ເຮັດຄວາມຜິດບາບ.[42]ພວກເພິ່ນຈະໂຍນພວກເຂົາໄປຖິ້ມໃສ່ເຕົາໄຟຮ້ອນກ້າ,


generated on Tue Jun 17 19:01:42 2025

ທີ່ບໍ່ມີວັນດັບມອດ ທີ່ນັ້ນຈະມີການຮ້ອງໄຫ້ ຄວນຄາງ ແລະ ກັດແຂ້ວຄ້ຽວຟັນ.[43]ຄາວນັ້ນພວກສິລະທັມຈະຮຸ່ງເຮືອງດັ່ງດວງຕາເວັນ ໃນຣາ-
ຊະອານາຈັກຂອງພຣະບິດາເຈົ້າຂອງພວກເຂົາ. ຜູ້ໃດມີຫູ, ກໍຈົ່ງຟັງເອົາ.
[44]ຣາຊະອານາຈັກສະຫວັນປຽບເຫມືອນຂຸມຊັບທີ່ເຊື່ອງໄວ້ໃນທົ່ງນາ. ຊຶ່ງຊາຍຜູ້ຫນຶ່ງໄດ້ພົບ ແລະ ໄດ້ເຊື່ອງໄວ້ອີກ.
ລາວຈຶ່ງໄປຂາຍສິ່ງທັງປວງທີ່ຕົນມີຢູ່ດ້ວຍຄວາມຍິນດີ ແລ້ວຊື້ນາທົ່ງນັ້ນ.[45]ອີກປະການຫນຶ່ງຣາຊະອານາຈັກສະຫວັນປຽບເຫມືອນພໍ່-
ຄ້າຜູ້ຫນຶ່ງທີ່ຊອກຫາໄຂ່ມຸກຢ່າງດີ.[46]ເມື່ອໄດ້ພົບໄຂ່ມຸກເມັດຫນຶ່ງທີ່ມີຄ່າຫລາຍ ລາວຈຶ່ງຂາຍທຸກສິ່ງທີ່ຕົນມີຢູ່ແລ້ວໄປຊື້ໄຂ່ມຸກນັ້ນ.
[47]ອີກປະການຫນຶ່ງ, ຣາຊະອານາຈັກສະຫວັນປຽບເຫມືອນມອງທີ່ຖິ້ມລົງໃນທະເລ, ແລະ ດັກເອົາສັດທະເລທຸກຊະນິດ.[48]ເມື່ອມອງເຕັມແລ້ວ,
ຄົນຫາປາກໍດຶງຂຶ້ນເທິງຝັ່ງ. ແລ້ວເຂົາຈະນັ່ງລົງເລືອກເອົາໂຕດີໃສ່ໃນຄຸໄວ້, ສ່ວນໂຕບໍ່ດີນັ້ນກໍຖືກໂຍນຖິ້ມເສັຽ.
[49]ໃນຄາວສຸດໂລກກໍຈະເປັນຢ່າງນັ້ນແຫລະ. ພວກເທວະດາຈະອອກມາ ແລະແຍກຄົນຊົ່ວອອກຈາກຄົນສິນທັມ.
[50]ພວກເຂົາຈະໂຍນຄົນຊົ່ວຖິ້ມໃສ່ເຕົາໄຟຮ້ອນກ້າທີ່ບໍ່ມີວັນດັບມອດ ທີ່ນັ້ນຈະມີການຮ້ອງໄຫ້ຄວນຄາງ ແລະ ກັດແຂ້ວຄ້ຽວຟັນ.
[51]ພວກທ່ານເຂົ້າໃຈຂໍ້ຄວາມເຫລົ່ານີ້ແລ້ວຫລືຍັງ?" ພວກສາວົກໄດ້ທູນຕອບວ່າ, "ເຂົ້າໃຈແລ້ວ."[52]ຈາກນັ້ນພຣະເຢຊູເຈົ້າຊົງກ່າວກັບເຂົາວ່າ,
"ດ້ວຍເຫດນີ້ ນັກທັມທຸກຄົນທີ່ໄດ້ມາເປັນສາວົກຂອງຣາຊະອານາຈັກສະຫວັນ ກໍເຫມືອນເຈົ້າຂອງເຮືອນ, ຜູ້ທີ່ເອົາສິ່ງຂອງທັງເກົ່າ ແລະ
ໃຫມ່ອອກມາຈາກສາງຂອງຕົນ."[53]ເມື່ອພຣະເຢຊູເຈົ້າຊົງກ່າວຄໍາອຸປະມາເຫລົ່ານີ້ສິ້ນສຸດລົງແລ້ວ, ພຣະອົງກໍສະເດັດໄປຈາກທີ່ນັ້ນ.
[54]ແລະ ໄດ້ຊົງສັ່ງສອນຄົນທັງຫລາຍໃນໂຮງທັມະສາລາຂອງພວກເຂົາ. ຜົນຄືພວກເຂົາທັງຫລາຍງຶດປະຫລາດໃຈແລ້ວເວົ້າກັນວ່າ,
"ຊາຍຜູ້ນີ້ໄດ້ສະຕິປັນຍາ ແລະ ເຮັດການ ອັດສະຈັນ ເຫລົ່ານີ້ມາແຕ່ໃສ?[55]ລາວເປັນລູກຊ່າງໄມ້ບໍ່ແມ່ນບໍ? ແມ່ຂອງລາວຊື່ມາຣີອາ ບໍ່ແມ່ນບໍ?
ພວກນ້ອງຊາຍຂອງລາວຊື່ ຢາໂກໂບ, ໂຢເຊັບ, ຊີໂມນ, ແລະ ຢູດາ ບໍ່ແມ່ນບໍ?[56]ແລ້ວພວກນ້ອງສາວຂອງລາວກໍຢູ່ກັບຫມູ່ເຮົາບໍ່ແມ່ນບໍ?
ແລ້ວລາວໄດ້ສິ່ງທັງປວງເຫລົ່ານີ້ມາແຕ່ໃສ?"
[57]ພວກເຂົາຈຶ່ງບໍ່ພໍໃຈພຣະເຢຊູເຈົ້າ. ແຕ່ພຣະເຢຊູເຈົ້າຊົງກ່າວກັບເຂົາວ່າ, "ຜູ້ປະກາດພຣະທັມຈະບໍ່ຂາດຄວາມນັບຖື ເວັ້ນໄວ້ແຕ່ໃນປະເທດ
ແລະ ໃນຄົວເຮືອນຂອງຕົນ."[58]ແລ້ວພຣະອົງບໍ່ໄດ້ຊົງກະທໍາການ ອັດສະຈັນຫລາຍ ເພາະເຂົາບໍ່ມີຄວາມເຊື່ອ.

14 1ໃນເວລານັ້ນເອງ, ເຮໂຣດຜູ້ປົກຄອງໄດ້ຍິນເຖິງຂ່າວຂອງພຣະເຢຊູເຈົ້າ. 2ເຂົາຈຶ່ງກ່າວແກ່ພວກຄົນໃຊ້ວ່າ, “ຜູ້ນີ້ແມ່ນໂຢຮັນບັບຕິສະໂຕ;
ເພິ່ນໄດ້ເປັນຄືນມາຈາກຕາຍ. ເພາະເຊັ່ນນີ້ເອງ ຣິດອຳນາດເຫລົ່ານີ້ຈຶ່ງສະແດງອອກມາໃນຕົວເພິ່ນ.”

3ແລະ ຂັງຄຸກໄວ້. ເພາະເຫັນແກ່ນາງເຮໂຣເດັຽພັນຣະຍາຂອງຟີລິບນ້ອງຊາຍຂອງຕົນ.
4“ເປັນການບໍ່ສົມຄວນທີ່ທ່ານຈະເອົານາງນັ້ນມາເປັນພັນຣະຍາຂອງທ່ານ.” 5ເຮໂຣດມີໃຈຢາກຂ້າໂຢຮັນແຕ່ກໍຢ້ານປະຊາຊົນ,
ເພາະວ່າພວກເຂົາໄດ້ຖືວ່າໂຢຮັນເປັນຜູ້ປະກາດພຣະທັມ.
6ແຕ່ເມື່ອເຖິງວັນສະຫລອງວັນເກີດຂອງເຮໂຣດ, ລູກສາວຂອງນາງເຮໂຣເດັຽໄດ້ຟ້ອນລຳ ທ່າມກາງບັນດາແຂກ ແລະ ເຮັດໃຫ້ເຮໂຣດພໍໃຈ.
7ດ້ວຍເຫດນີ້, ຈຶ່ງໃຫ້ເຮໂຣດໃຫ້ຄຳສັນຍາສາບານກັບນາງວ່າ ຈະໃຫ້ໃນທຸກສິ່ງທີ່ນາງຂໍ.
8ຫຼັງຈາກທີ່ໄດ້ຮັບຄຳແນະນຳຈາກແມ່, ນາງຈຶ່ງໄດ້ທູນວ່າ, “ຂໍໂຜດໃຫ້ຫົວໂຢຮັນບັບຕິສະໂຕໃສ່ຖາດມາໃຫ້ຂ້ານ້ອຍທີ່ນີ້.” 9ຝ່າຍເຮໂຣດຜູ້ປົກ-
ຄອງກໍທຸກໃຈຫຼາຍ ແຕ່ເພາະເຫດທີ່ໄດ້ສັນຍາສາບານ ແລະ ເພາະເຫັນແກ່ຄົນທັງປວງທີ່ນັ່ງຮ່ວມຮັບປະທານຢູ່ນັ້ນ,
ເພິ່ນຈຶ່ງຈຳເປັນອອກຄຳສັ່ງອະນຸຍາດໃຫ້ຕາມນັ້ນ.
10ທ່ານໃຊ້ຄົນໄປຕັດເອົາຫົວໂຢຮັນໃນຄຸກ. 11ແລ້ວເອົາຫົວໃສ່ຖາດມາໃຫ້ນາງນັ້ນ ແລະ ນາງກໍໄປສົ່ງໃຫ້ແມ່ຂອງຕົນ. 12ແລ້ວພວກສາວົກຂອງໂຢ-
ຮັນກໍພາກັນມາຮັບເອົາສົບໄປຝັງໄວ້. ຫຼັງຈາກແລ້ວກໍມາທູນໃຫ້ພຣະເຢຊູເຈົ້າຊົງຊາບ.
13ບັດນີ້ ເມື່ອພຣະເຢຊູເຈົ້າໄດ້ຊົງຊາບແລ້ວ, ພຣະອົງຊົງແຍກຕົວອອກໄປຈາກທີ່ນັ້ນ ລົງເຮືອສະເດັດໄປຍັງສະຖານທີ່ຢູ່ຕ່າງຫາກ. ເມື່ອປະຊາ-
ຊົນທັງປວງໄດ້ຍິນຂ່າວນັ້ນ, ພວກເຂົາກໍອອກຈາກເມືອງ, ພວກເຂົາໄດ້ຍ່າງຕິດຕາມພຣະອົງໄປ. 14ແລ້ວເມື່ອພຣະເຢຊູເຈົ້າໄດ້ສະ-
ເດັດອອກຈາກເຮືອແລ້ວກໍຊົງເຫັນປະຊາຊົນໝູ່ໃຫຍ່ ພຣະອົງຊົງສົງສານເຂົາ ຈຶ່ງຊົງໂຜດຄົນເຈັບປ່ວຍທັງຫລາຍ ໃຫ້ພວກເຂົາຫາຍດີ.
15ເມື່ອເວລາແລງມາ, ພວກສາວົກໄດ້ມາທູນຕໍ່ພຣະອົງວ່າ, “ບ່ອນນີ້ເປັນປ່າກັນດານ ແລະ ບັດນີ້ຄ່ຳແລ້ວ. ປ່ອຍໃຫ້ປະຊາຊົນເລີກໄປເສັຽ,
ເພື່ອພວກເຂົາຈະໄດ້ໄປໃນເມືອງ ແລະ ຊື້ອາຫານຮັບປະທານໃຫ້ຕົນເອງ.”
16ແຕ່ພຣະເຢຊູຊົງຕອບເຂົາວ່າ, “ພວກເຂົາບໍ່ຈຳເປັນຕ້ອງໄປ ພວກທ່ານຈົ່ງຫາອາຫານລ້ຽງພວກເຂົາສາ.” 17“ພວກຂ້ານ້ອຍມີພຽງແຕ່ເຂົ້າ-
ຈີ່ຫ້າກ້ອນແລະປາສອງໂຕເທົ່ານັ້ນ.” 18ພຣະເຢຊູເຈົ້າຊົງບອກວ່າ, “ນຳເອົາເຫຼົ່ານັ້ນມາໃຫ້ເຮົາ.”
19ຈາກນັ້ນພຣະເຢຊູຊົງສັ່ງໃຫ້ປະຊາຊົນນັ່ງລົງຕາມປ່າຫຍ້າ. ພຣະອົງຊົງເອົາເຂົ້າຈີ່ຫ້າກ້ອນ ແລະ ປາສອງໂຕນັ້ນ. ແລ້ວກໍຊົງເງີຍພຣະ-
ພັກສູ່ສະຫວັນ, ພຣະອົງໄດ້ຂໍພຣະພອນ ແລ້ວຫັກເຂົ້າຈີ່ແລ້ວກໍຍື່ນໃຫ້ພວກສາວົກ, ແລ້ວພວກສາວົກກໍແຈກຢາຍໃຫ້ຄົນທັງປວງ.
20ສ່ວນສາວົກກໍເກັບອາຫານທີ່ເຫລືອນັ້ນ ໄດ້ເຕັມສິບສອງບຸງ. 21ຄົນທັງຫຼາຍທີ່ກິນນັ້ນມີຜູ້ຊາຍປະມານຫ້າພັນຄົນ ໂດຍບໍ່ນັບແມ່ຍິງ ແລະ ເດັກ-
ນ້ອຍ.
22ທັນໃດນັ້ນພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປກ່ອນ ຂະນະທີ່ພຣະອົງຊົງສັ່ງໃຫ້ປະຊາຊົນເລີກໄປ. 23ຫຼັງຈາກພຣະອົງຊົງໃຫ້ປະ-
ຊາຊົນເຫລົ່ານັ້ນເລີກໄປໝົດແລ້ວ ພຣະອົງຈຶ່ງສະເດັດຂຶ້ນພູຢູ່ຕ່າງຫາກເພື່ອໄຫວ້ວອນ. ເມື່ອຄ່ຳມາແລ້ວພຣະອົງກໍຍັງຊົງຢູ່ທີ່ນັ້ນແຕ່ຕົນດຽວ.
24ແລະເກືອບຈະຄວບຄຸມເຮືອບໍ່ໄດ້ ແລະຖືກຟອງນ້ຳຕີໄປມາເພາະທວນລົມຕ້ານຢູ່.
25ໃນເວລາສີ່ໂມງຂ້ອນແຈ້ງ ພຣະເຢຊູເຈົ້າຊົງຍ່າງເທິງນ້ຳໄປຫາພວກສາວົກ.
26ເມື່ອພວກເພິ່ນເຫັນພຣະອົງຍ່າງເທິງໜ້ານ້ຳທະເລ, ພວກເຂົາກໍຕົກໃຈຢ້ານ ແລະ ໄດ້ເວົ້າກັນວ່າ, “ນັ້ນແມ່ນຜີ”
ແລ້ວພວກເຂົາຈຶ່ງຮ້ອງຂຶ້ນເພາະຄວາມຢ້ານ. 27ແຕ່ ພຣະເຢຊູເຈົ້າ ໄດ້ກ່າວໂດຍທັນທີ “ຈົ່ງກ້າຫານເຖີດ ນີ້ແມ່ນເຮົາເອງ ຢ່າສູ່ຢ້ານ.”
28ເປໂຕຈຶ່ງທູນຕອບພຣະອົງວ່າ, “ນາຍເອີຍ, ຖ້າແມ່ນທ່ານແນ່ແລ້ວ ຂໍສັ່ງໃຫ້ຂ້ານ້ອຍຍ່າງເທິງນ້ຳໄປຫາທ່ານ.” 29ພຣະເຢຊູເຈົ້າຊົງບອກວ່າ, “ມາ-
ສາ” ດັ່ງນັ້ນເປໂຕຈຶ່ງອອກຈາກເຮືອຍ່າງເທິງນ້ຳໄປຫາພຣະເຢຊູເຈົ້າ. 30ແຕ່ເມື່ອເຫັນລົມກໍຢ້ານແລະເມື່ອກຳລັງຈະຈົມກໍຮ້ອງວ່າ, “ນາຍເອີຍ,
ຊ່ອຍຂ້ານ້ອຍໃຫ້ພົ້ນແດ່ທ້ອນ.”
31ໃນທັນໃດນັ້ນພຣະເຢຊູເຈົ້າຊົງຢື່ພຣະຫັດຈັບເປໂຕໄວ້ແລ້ວຊົງກ່າວວ່າ, “ໂອ ຜູ້ມີຄວາມເຊື່ອນ້ອຍເອີຍ ເປັນຫຍັງ ຈຶ່ງສົງໄສ?” 32ເມື່ອພຣະ-
ເຢຊູເຈົ້າ ແລະ ເປໂຕໄດ້ຂຶ້ນໄປ ໃນເຮືອແລ້ວ, ລົມກໍເຊົາພັດ. 33ແລ້ວພວກທີ່ຢູ່ໃນເຮືອໄດ້ມາກົ້ມຂາບໃສ່ພຣະເຢຊູ ແລະເວົ້າວ່າ,
“ພຣະອົງຊົງເປັນພຣະບຸດຂອງພຣະເຈົ້າຈິງແທ້.”
34ເມື່ອພວກເຂົາຂ້ວາມນ້ຳໄປເຖິງແລ້ວ, ພວກເຂົາໄດ້ມາເຖິງທ່າເມືອງເຄັນເນຊາເຣັດ. 35ເມື່ອຄົນໃນເຂດນັ້ນໄດ້ຮູ້ຈັກພຣະເຢຊູເຈົ້າແລ້ວ,
ພວກເຂົາກໍໃຊ້ຄົນໄປບອກກ່າວທົ່ວຕະຫລອດເຂດນັ້ນ ແລະ ພວກເຂົາຈຶ່ງພາບັນດາຄົນເຈັບປ່ວຍມາຫາພຣະອົງ.
36ແລ້ວຜູ້ໃດໄດ້ບາຍແລ້ວກໍຖືກຊົງໂຜດໃຫ້ດີປົກກະຕິ.

15 [1]ຈາກນັ້ນພວກຟາຣີຊາຍ ແລະ ພວກນັກທັມອອກມາຈາກນະຄອນເຢຣູຊາເລັມມາຫາພຣະເຢຊູ. ພວກເຂົາທູນຖາມພຣະເຢຊູວ່າ,
[2]“ເປັນຫຍັງພວກສິດຂອງທ່ານຈຶ່ງລະເມີດຕໍ່ຄໍາສອນປະເພນີ ທີ່ຕົກທອດມາຈາກເຖົ້າເກົ່າບູຮານນັ້ນ?
ເພາະພວກເຂົາບໍ່ລ້າງມືກ່ອນຮັບປະທານອາຫານ”.[3]ພຣະອົງຊົງຕອບເຂົາວ່າ, “ເຫດສັນໃດພວກທ່ານຈຶ່ງລະເມີດຕໍ່ຂໍ້ບັນຍັດຂອງພຣະເຈົ້າ
ດ້ວຍເຫັນແກ່ຄໍາສອນປະເພນີທີ່ຕົກທອດສືບຕໍ່ກັນມານັ້ນ?"

[4]ເພາະພຣະເຈົ້າໄດ້ຊົງບັນຍັດໄວ້ວ່າ ‘ຈົ່ງນັບຖືບິດາມານດາຂອງເຈົ້າ’ ແລະ ‘ຜູ້ໃດໝິ່ນປະໝາດບິດາມານດາ ຜູ້ນັ້ນຈະຕ້ອງມີໂທດເຖິງຕາຍ’.
[5]‘ຜູ້ໃດທີ່ຈະເວົ້າກັບບິດາມານດາວ່າ, “ສິ່ງໃດຂອງຂ້ອຍທີ່ອາດຊ່ອຍເຫລືອເຈົ້າໄດ້
ສິ່ງນັ້ນກໍເປັນຂອງຖວາຍສໍາລັບພຣະເຈົ້າແລ້ວ.”[6]ຜູ້ນັ້ນຈຶ່ງບໍ່ຕ້ອງນັບຖືບິດາມານດາຂອງຕົນ’ ດັ່ງນັ້ນແຫລະ, ພວກທ່ານໄດ້ລຶບລ້າງພຣະ-
ທັມຂອງພຣະເຈົ້າ ເພາະເຫັນແກ່ຄໍາສອນປະເພນີທີ່ຕົກທອດສືບປະຕິບັດຕໍ່ກັນມາຂອງພວກເຈົ້າ.
[7]ໂອ ຄົນໜ້າຊື່ໃຈຄົດເອີຍ, ເອຊາຢາໄດ້ທໍານວາຍຄັກແນ່ເຖິງພວກທ່ານວ່າ,
[8]ພົນລະເມືອງເຫລົ່ານີ້ໃຫ້ກຽດເຮົາແຕ່ປາກສ່ວນໃຈຂອງເຂົາຫ່າງໄກຈາກເຮົາ.[9]ເຂົານະມັດສະການເຮົາໂດຍອັບປະໂຫຍດ ດ້ວຍເປົ່າປະໂຫຍດ
ເມື່ອຄໍາສັ່ງສອນຂອງພວກມະນຸດເອົາບົດບັດຍັດຂອງພວກເຂົາ ອັນເປັນຄໍາສັ່ງສອນເກີດຈາກມະນຸດ’.”
[10]ຈາກນັ້ນພຣະອົງຊົງເອີ້ນເອົາປະຊາຊົນ ແລະຊົງກ່າວກັບເຂົາວ່າ, “ຈົ່ງຟັງແລະເຂົ້າໃຈສາ.[11]ບໍ່ແມ່ນສິ່ງທີ່ເຂົ້າໄປໃນປາກນັ້ນ ທີ່ເຮັດໃຫ້ມະ-
ນຸດຊົ່ວມົວໝອງ ແຕ່ແມ່ນສິ່ງທີ່ອອກມາຈາກປາກນັ້ນແຫລະ ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ.”
[12]ຈາກນັ້ນພວກສາວົກມາທູນຖາມພຣະອົງວ່າ, “ທ່ານຊາບແລ້ວຫລືວ່າເມື່ອພວກຟາຣີຊາຍໄດ້ຍິນຄໍາກ່າວນັ້ນ ເຂົາກໍເສັຽໃຈ.”[13]ພຣະ-
ອົງຊົງຕອບວ່າ, “ໄມ້ທຸກຕົ້ນທີ່ພຣະບິດາຂອງເຮົາ ຜູ້ຊົງສະຖິດຢູ່ໃນສະຫວັນ ບໍ່ໄດ້ຊົງປູກໄວ້ຈະຕ້ອງຫລົກເສັຽ.[14]ຊ່າງພວກເຂົາເທາະ
ເພາະພວກເຂົາເປັນຄົນນໍາທາງທີ່ຕາບອດ ຖ້າຄົນຕາບອດຈູງຄົນຕາບອດໄປເຂົາທັງສອງກໍຈະຕົກໃນຂຸມ.”
[15]ເປໂຕຈຶ່ງທູນພຣະອົງວ່າ, “ຂໍທ່ານໂຜດອະທິບາຍຄໍາອຸປະມານີ້ໃຫ້ພວກຂ້ານ້ອຍແດ່.”[16]ພຣະເຢຊູເຈົ້າຊົງຕອບວ່າ,
“ພວກທ່ານກໍຍັງຂາດຄວາມເຂົ້າໃຈເໝືອນກັນບໍ?[17]ສິ່ງໃດທີ່ເຂົ້າໄປໃນປາກກໍລົງໃນທ້ອງ ແລ້ວກໍຖ່າຍອອກມາລົງໃສ່ໂຖສ້ວມ?
[18]ແຕ່ສິ່ງທີ່ອອກຈາກປາກ ກໍອອກມາຈາກໃຈດ້ວຍ. ສິ່ງນັ້ນແຫລະເຮັດໃຫ້ມະນຸດຊົ່ວມົວໝອງ.[19]ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມັຍ,
ການຜິດຊາຍຍິງ, ການລັກຊັບ, ການເປັນພະຍານບໍ່ຈິງ, ແລະການນິນທາ ກໍອອກມາຈາກໃຈ.[20]ສິ່ງເຫລົ່ານີ້ແຫລະ, ທີ່ເຮັດໃຫ້ມະ-
ນຸດຊົ່ວມົວໝອງ ແຕ່ການຮັບປະທານອາຫານບໍ່ລ້າງມືກ່ອນນັ້ນ ບໍ່ໄດ້ເຮັດໃຫ້ມະນຸດຊົ່ວມົວໝອງ.”
[21]ຈາກນັ້ນພຣະເຢຊູໄດ້ສະເດັດຈາກບ່ອນນັ້ນເຂົ້າໄປໃນເຂດເມືອງຕີເຣແລະເມືອງຊີໂດນ.[22]ເບິ່ງແມ, ມີຍິງຊາວການາ-
ອານຄົນໜຶ່ງມາຈາກເຂດນັ້ນຮ້ອງທູນພຣະອົງວ່າ, “ໂຜດເມດຕາຕໍ່ຂ້ານ້ອຍແດ່ຖ້ອນ ອົງຜູ້ເປັນພຣະເຈົ້າ ບຸດດາວິດເອີຍ, ລູກສາວຂອງຂ້າ-
ນ້ອຍມີຄວາມລໍາບາກຫລາຍຍ້ອນຜີຮ້າຍບັງຄັບ.”[23]ແຕ່ພຣະອົງບໍ່ໄດ້ຊົງຕອບຍິງນັ້ນຈັກຄໍາ ແລ້ວພວກສາວົກໄດ້ມາທູນພຣະອົງວ່າ,
“ຂໍບອກໃຫ້ນາງເມືອເສັຽ ເພາະນາງກໍາລັງຮ້ອງຕາມຫລັງພວກເຮົາ.”
[24]ແຕ່ພຣະເຢຊູຊົງຕອບວ່າ, “ເຮົາບໍ່ໄດ້ຖືກສົ່ງໃຊ້ມາຫາຜູ້ອື່ນ ເວັ້ນແຕ່ຝູງແກະທີ່ເສັຽແລ້ວ ຄືຕະກຸນອິ-
ສະຣາເອນເທົ່ານັ້ນ.”[25]ແຕ່ຍິງນັ້ນໄດ້ມາຂາບທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າເອີຍ, ຂໍໂຜດຊ່ອຍຂ້ານ້ອຍແດ່ຖ້ອນ.”[26]ພຣະອົງຊົງຕອບວ່າ,
“ບໍ່ສົມຄວນຈະເອົາອາຫານຂອງລູກໂຍນໃຫ້ແກ່ໝານ້ອຍ.”
[27]ຍິງນັ້ນທູນຕອບວ່າ, “ຈິງຢູ່ຂ້ານ້ອຍ ແຕ່ເຖິງແມ່ນໝານ້ອຍກໍເຄີຍກິນເມັດທີ່ຕົກຈາກໂຕະນາຍຂອງມັນ.”[28]“ນາງເອີຍ,
ຄວາມເຊື່ອຂອງເຈົ້າກໍໃຫຍ່ ຈົ່ງເປັນໄປຕາມຄວາມປະສົງຂອງເຈົ້າເຖີ້ນ” ແລ້ວລູກສາວຂອງຍິງນັ້ນກໍດີເປັນປົກກະຕິຕັ້ງແຕ່ໂມງນັ້ນ.
[29]ພຣະເຢຊູເຈົ້າໄດ້ສະເດັດອອກຈາກທີ່ນັ້ນ ແລະໄປເລາະລຽບຝັ່ງທະເລຄາລີເລ. ຈາກນັ້ນພຣະອົງສະເດັດຂຶ້ນພູຊົງປະທັບນັ່ງລົງທີ່ນັ້ນ.
[30]ເຂົາພາຄົນຂາເສັ້ງ, ຄົນຕາບອດ, ຄົນປາກກືກ, ຄົນເປັ້ຽລ່ອຍ ແລະຄົນເຈັບອື່ນໆຫລາຍຄົນ ມາຫາພຣະເຢຊູເຈົ້າ ວາງໄວ້ທີ່ໃກ້ຕີນຂອງພຣະອົງ
ແລະພຣະອົງໄດ້ຊົງໂຜດໃຫ້ເຂົາດີ.[31]ຝູງຄົນເຫລົ່ານັ້ນງຶດອັດສະຈັນໃຈ ເມື່ອເຫັນຄົນປາກກືກປາກໄດ້, ຄົນແຂນຂາເສັ້ງດີປົກກະຕິ,
ຄົນເປັ້ຽລ່ອຍຍ່າງໄປໄດ້, ແລະຄົນຕາບອດເຫັນໄດ້ ແລ້ວເຂົາຈຶ່ງສັນຣະເສີນພຣະເຈົ້າຂອງຊາດອິສະຣາເອນ.
[32]ພຣະເຢຊູເຈົ້າຊົງເອີ້ນພວກສາວົກຂອງຕົນມາ ແລ້ວຊົງກ່າວວ່າ, “ເຮົາສົງສານຄົນເຫລົ່ານີ້ ເພາະເຂົາຄ້າງຢູ່ກັບເຮົາໄດ້ສາມວັນແລ້ວ
ແລະບໍ່ມີອາຫານກິນ ເຮົາບໍ່ຢາກໃຫ້ເຂົາກັບໄປໃນຂະນະທີ່ຍັງຫິວຢູ່
ເພາະຢ້ານວ່າເຂົາຈະເມື່ອຍອິດອ່ອນຕາມທາງ.”[33]“ໃນປ່າຢ່າງນີ້ພວກຂ້ານ້ອຍຈະຊອກອາ-
ຫານທີ່ໃດພໍລ້ຽງຄົນເຫລົ່ານີ້ໃຫ້ອີ່ມໄດ້.”[34]“ພວກທ່ານມີເຂົ້າຈີ່ຈັກກ້ອນ” ເຂົາທູນຕອບວ່າ,
“ມີເຈັດກ່ອນກັບປານ້ອຍສອງສາມໂຕ.”[35]ຈາກນັ້ນພຣະເຢຊູເຈົ້າຊົງສັ່ງໃຫ້ປະຊາຊົນນັ່ງລົງຕາມດິນ.
[36]ພຣະອົງຮັບເຂົ້າຈີ່ເຈັດກ້ອນກັບປາເຫລົ່ານັ້ນມາໂມທະນາຂອບພຣະຄຸນ ພຣະອົງຊົງຫັກເຂົ້າຈີ່ ແລະຍື່ນໃຫ້ພວກສາວົກຂອງຕົນ. ພວກສາ-
ວົກກໍໄດ້ແຈກຢາຍໃຫ້ປະຊາຊົນ.[37]ຄົນທັງປວງໄດ້ກິນອີ່ມໝົດດທຸກຄົນຕ່ອນຫັກທີ່ເຫລືອນັ້ນເຂົາເກັບໄດ້ເຕັມເຈັດບຸງ.
[38]ສ່ວນຄົນທີ່ໄດ້ກິນນັ້ນມີຜູ້ຊາຍເຖິງສີ່ພັນຄົນ ບໍ່ນັບແມ່ຍິງກັບເດັກນ້ອຍ.[39]ຈາກນັ້ນພຣະເຢຊູຊົງໃຫ້ຝູງຄົນກັບໄປ
ພຣະອົງກໍສະເດັດລົງເຮືອໄປຍັງເຂດເມືອງມາຄາດານ.

16 [1]ພວກຟາຣີຊາຍກັບພວກຊາດູກາຍໄດ້ມາຫາແລະທົດລອງພຣະອົງ ໂດຍຂໍໃຫ້ພຣະອົງຊົງສະແດງຫມາຍສຳ-
ຄັນຢ່າງຫນຶ່ງຈາກສະຫວັນໃຫ້ເຂົາເຫັນ.[2]ພຣະອົງຊົງຕອບເຂົາວ່າ, "ເມື່ອຄ່ຳມາພວກທ່ານເຄີຍເວົ້າວ່າ 'ອາກາດຈະດີເພາະຟ້າສີແດງ.'

[3]ແລະເວລາເຊົ້າພວກທ່ານກໍເວົ້າວ່າ 'ມື້ນີ້ຈະເກີດພາຍຸເພາະຟ້າສີແດງ ແລະມືດມົວ' ພວກທ່ານຍັງສັງ-
ເກດຮູ້ຄວາມຫມາຍຂອງລັກສະນະທ້ອງຟ້າຢ່າງໃດ, ແຕ່ພວກທ່ານບໍ່ອາດສັງເກດໄດ້ຫມາຍສຳຄັນແຫ່ງສະໄຫມຕ່າງໆໄດ້.
[4]ແຕ່ຈະບໍ່ຊົງໂຜດຫມາຍສຳຄັນໃຫ້ແກ່ເຂົາ ເວັ້ນໄວ້ແຕ່ຫມາຍສຳຄັນເລື່ອງໂຢນາ" ແລ້ວພຣະອົງກໍສະເດັດຈາກເຂົາໄປ.
[5]ເຫລົ່າສາວົກເມື່ອຂ້າມໄປຟາກນັ້ນ, ກໍໄດ້ລືມເອົາເຂົ້າຈີ່ໄປນຳ.[6]ພຣະເຢຊູເຈົ້າຊົງບອກເຂົາວ່າ, "ຈົ່ງສັງ-
ເກດ ແລະ ຣະວັງເຊື້ອແປ້ງຂອງພວກຟາຣີຊາຍແລະພວກຊາດູກາຍໃຫ້ດີ."[7]ພວກສາວົກກໍເວົ້າຖ່າມກາງພວກກັນເອງວ່າ,
"ເພາະຫມູ່ເຮົາບໍ່ໄດ້ເອົາເຂົ້າຈີ່ມານຳ."[8]ພຣະເຢຊູເຈົ້າຊົງຊາບແລະຈຶ່ງຊົງກ່າວວ່າ, "ທ່ານຜູ້ມີຄວາມເຊື່ອຫນ້ອຍ
ເຫດໃດພວກທ່ານຈຶ່ງເວົ້າກັນແລະກັນເຖິງເລື່ອງບໍ່ໄດ້ເອົາເຂົ້າຈີ່ມານຳ?
[9]ພວກທ່ານຍັງບໍ່ເຂົ້າໃຈແລະຈື່ບໍ່ໄດ້ບໍເລື່ອງເຂົ້າຈີ່ຫ້າກ້ອນສຳລັບຄົນຫ້າພັນຄົນນັ້ນ ແລະພວກທ່ານເກັບໄດ້ຈັກບຸງ?[10]ຫລືເລື່ອງເຂົ້າຈີ່ເຈັດກ້ອນສຳ-
ລັບຄົນສີ່ພັນຄົນນັ້ນ ແລະພວກທ່ານເກັບໄດ້ຈັກບຸງ?
[11]ເປັນສັນໃດພວກທ່ານຈຶ່ງບໍ່ເຂົ້າໃຈວ່າ ເຮົາບໍ່ໄດ້ເວົ້າກັບພວກທ່ານດ້ວຍເລື່ອງເຂົ້າຈີ່? ຈົ່ງເອົາໃຈໃສ່ແລະຣະວັງເຊື້ອແປ້ງຂອງພວກຟາຣີ-
ຊາຍແລະພວກຊາດູກາຍ."[12]ແລ້ວພວກເຂົາໄດ້ເຂົ້າໃຈວ່າ ພຣະອົງບໍ່ໄດ້ຊົງສັ່ງເຂົາໃຫ້ຣະວັງເຊື້ອແປ້ງນັ້ນ, ແຕ່ໃຫ້ຣະວັງຄຳສອນຂອງພວກຟາ-
ຣີຊາຍ ແລະ ພວກຊາດູກາຍ.
[13]ບັດນີ້ ເມື່ອພຣະເຢຊູສະເດັດມາເຖິງເຂດເມືອງກາຍຊາເຣັຽຟີລິບປອຍ, ພຣະອົງຊົງຖາມພວກສາວົກຂອງຕົນວ່າ, "ຄົນທັງ-
ຫລາຍເວົ້າກັນວ່າບຸດມະນຸດແມ່ນຜູ້ໃດ?"[14]ເຂົາທູນຕອບວ່າ, "ຜູ້ລາງຄົນວ່າເປັນໂຢຮັນບັບຕິສະໂຕ ແລະ ຄົນອື່ນວ່າເປັນເອລີຢາ
ແຕ່ຄົນອື່ນອີກວ່າເປັນເຢເຣມີຢາ ຫລືເປັນຄົນຫນຶ່ງໃນພວກຜູ້ປະກາດພຣະທັມ."[15]ພຣະອົງຊົງຖາມເຂົາວ່າ, "ແລ້ວຝ່າຍພວກທ່ານເດ,
ວ່າເຮົາເປັນໃຜ?"[16]ຊີໂມນເປໂຕທູນຕອບວ່າ, "ທ່ານເປັນພຣະຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່."
[17]ພຣະເຢຊູຊົງກ່າວກັບເປໂຕວ່າ, "ທ່ານກໍເປັນສຸກ ຊີໂມນບາຣະໂຢນາເອີຍ, ເພາະວ່າບໍ່ແມ່ນມະນຸດທີ່ໄດ້ສະແດງຄຳນີ້ແກ່ທ່ານ, ແຕ່ແມ່ນພຣະ-
ບິດາຂອງເຮົາຜູ້ຊົງສະຖິດໃນສະຫວັນຊົງໃຫ້ຊາບ.[18]ເຮົາຍັງບອກທ່ານວ່າທ່ານຄືເປໂຕ, ແລະເທິງສີລາກ້ອນນີ້ ເຮົາຈະສ້າງຄຣິສ-
ຕະຈັກຂອງເຮົາຂຶ້ນ ແລະປະຕູແຫ່ງແດນມໍຣະນາ'ຈະມີໄຊຕໍ່ຄຣິສຕະຈັກນັ້ນບໍ່ໄດ້.
[19]ເຮົາຈະມອບກະແຈແຫ່ງອານາຈັກສະຫວັນໄວ້ໃຫ້ທ່ານ ສິ່ງໃດກໍຕາມທ່ານຈະຜູກມັດໄວ້ໃນໂລກ, ສິ່ງນັ້ນກໍຈະຊົງຜູກມັດໄວ້ແລ້ວໃນສະຫວັນ
ແລະສິ່ງໃດກໍຕາມທ່ານຈະແກ້ໃນໂລກ, ສິ່ງນັ້ນກໍຈະຊົງແກ້ໃຫ້ຫລຸດແລ້ວໃນສະ-
ຫວັນ."[20]ຈາກນັ້ນພຣະເຢຊູຊົງຫ້າມພວກສາວົກບໍ່ໃຫ້ບອກຜູ້ໃດວ່າຕົນຊົງເປັນພຣະຄຣິດ.
[21]ນັບຕັ້ງແຕ່ເວລານັ້ນມາພຣະເຢຊູເຈົ້າຊົງຕັ້ງຕົ້ນສຳແດງແກ່ພວກສາວົກຂອງຕົນວ່າ ພຣະອົງຈະຕ້ອງສະເດັດໄປນະຄອນເຢຣູຊາເລັມ
ຕ້ອງທົນທຸກທໍຣະມານຫລາຍປະການຈາກພວກເຖົ້າແກ່, ຈາກພວກປະໂລຫິດຕົນໃຫຍ່, ແລະຈາກພວກນັກທັມ, ພຣະອົງຈະຖືກຂ້າຕາຍ
ແລະພຣະອົງຈະຖືກຊົງບັນດານໃຫ້ເປັນຄືນມາໃນວັນຖ້ວນສາມ.[22]ຈາກນັ້ນເປໂຕໄດ້ພາພຣະອົງໄປຕ່າງຫາກ ແລະຕັ້ງຕົ້ນຕຳນິພຣະອົງຢ່າງແຂງ-
ແຮງວ່າ, "ຂໍໃຫ້ສິ່ງນີ້ຫ່າງໄກຈາກພຣະອົງ; ອົງພຣະຜູ້ເປັນເຈົ້າຂໍຢ່າໃຫ້ສິ່ງນີ້ເກີດມີແກ່ທ່ານຈັກເທື່ອ."[23]"ໄອ້ຊາຕານເອີຍ,
ຈົ່ງຖອຍຫນີຈາກເຮົາເສັຽ ເຈົ້າເປັນສິ່ງກີດຂວາງເຮົາ ເພາະເຈົ້າບໍ່ຄິດຢ່າງພຣະເຈົ້າ ແຕ່ຄິດຢ່າງມະນຸດ."
[24]ຈາກນັ້ນພຣະເຢຊູເຈົ້າຊົງບອກພວກສາວົກຂອງຕົນວ່າ, "ຖ້າຜູ້ໃດປາຖນາ
ຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລ້ວຮັບແບກໄມ້ກາງແຂນຂອງຕົນ ແລ້ວຕິດຕາມເຮົາມາ.[25]ເພາະຜູ້ໃດຢາກຊ່ອຍຊີ-
ວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດນັ້ນ, ແລະຖ້າຜູ້ໃດຈະເສັຽຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະພົບຊີວິດນັ້ນ.[26]ເພາະຈະມີ ຈະໄດ້ປະ-
ໂຫຍດອັນໃດ ສຳລັບຜູ້ນັ້ນ ຖ້າຈະໄດ້ສິ່ງຂອງຫມົດທັງໂລກ ແຕ່ຕ້ອງເສັຽຊີວິດອັນແທ້ຂອງຕົນເອງ? ແລ້ວຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີ-
ວິດອັນແທ້ຂອງຕົນກັບຄືນມາ?
[27]ເພາະບຸດມະນຸດຈະມາດ້ວຍສະຫງ່າຣາສີແຫ່ງພຣະບິດາຂອງຕົນ ພ້ອມດ້ວຍພວກເທວະດາຂອງພຣະອົງ. ຈາກນັ້ນພຣະອົງຈະຊົງປຣະ-
ທານບຳເຫນັດໃຫ້ແກ່ທຸກຄົນຕາມການທີ່ເຂົາເຮັດນັ້ນ.[28]ເຮົາບອກພວກທ່ານຕາມຄວາມຈິງວ່າ ຈະມີພວກທ່ານບາງຄົນທີ່ຢືນຢູ່ນີ້
ທີ່ຈະບໍ່ຮູ້ຣົດແຫ່ງຄວາມຕາຍ ຈົນກວ່າຈະໄດ້ເຫັນບຸດມະນຸດສະເດັດມາດ້ວຍຣາຊະອຳນາດຂອງພຣະອົງ."


generated on Tue Jun 17 19:01:42 2025

17 [1]ຫົກວັນຕໍ່ມາພຣະເຢຊູຊົງພາເປໂຕ, ຢາໂກໂບ, ແລະ ໂຢຮັນນ້ອງຊາຍຂອງຢາໂກໂບ, ແລະ ໄດ້ຂຶ້ນພູສູງຢູ່ຕ່າງຫາກ.
[2]ພຣະອົງໄດ້ຊົງປ່ຽນແປງພຣະກາຍຕໍ່ຫນ້າພວກເຂົາ. ພຣະພັກຂອງພຣະອົງສ່ອງແສງດັ່ງຕາເວັນ, ແລະ ເຄື່ອງນຸ່ງ
ຂອງພຣະອົງກໍຂາວຜ່ອງເຫລື້ອມເຫມືອນແສງສະຫວ່າງກ້າ.

[3]ເບິ່ງແມ, ໂມເຊແລະເອລີຢາກໍມາປະກົດແກ່ສາວົກເຫລົ່ານັ້ນ ເຝົ້າສົນທະນາຢູ່ກັບພຣະອົງ.[4]ເປໂຕໄດ້ຕອບ ແລະ ກ່າວຕໍ່ພຣະເຢຊູເຈົ້າວ່າ,
“ອົງພຣະຜູ້ເປັນເຈົ້າ, ເປັນການດີທີ່ພວກເຮົາຈະຢູ່ທີ່ນີ້ກໍດີຢູ່. ຖ້າທ່ານປະສົງ, ຂ້ານ້ອຍຈະປຸກຕູບສາມຫລັງຂຶ້ນທີ່ນີ້, ສໍາລັບທ່ານຫລັງຫນຶ່ງ ສໍາ-
ລັບໂມເຊຫລັງໜຶ່ງ ແລະ ຫລັງຫນຶ່ງສໍາລັບເອລີຢາ.”
[5]ຂະນະທີ່ເປໂຕກໍາລັງເວົ້າຍັງບໍ່ທັນຂາດຄໍາເບິ່ງແມ, ມີເມກສຸກໃສມາປົກຫຸ້ມເຂົາໄວ້ ແລະເບິ່ງແມ, ມີພຣະສຸຣະສຽງອອກມາຈາກເມກນັ້ນວ່າ,
“ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ, ຊຶ່ງເຮົາຊອບໃຈຫລາຍ ພວກເຈົ້າຈົ່ງເຊື່ອຟັງເພິ່ນ.”[6]ຝ່າຍພວກສາວົກເມື່ອໄດ້ຍິນດັ່ງ-
ນັ້ນກໍກົ້ມຫນ້າຂາບລົງແລະຢ້ານຫລາຍ.[7]ແລະໂດຍຊົງກ່າວວ່າ, “ຈົ່ງລຸກຂຶ້ນເຖີດ ຢ່າຊູ່ຢ້ານເລີຍ.”[8]ເມື່ອເງີຍຫນ້າຂຶ້ນແລ້ວເຂົາກໍບໍ່ເຫັນຜູ້ໃດ
ເຫັນແຕ່ພຣະເຢຊູເຈົ້າຜູ້ດຽວເທົ່ານັ້ນ.
[9]ເມື່ອເຂົາກໍາລັງລົງມາຈາກພູນັ້ນ, ພຣະເຢຊູຊົງສັ່ງເຂົາໄວ້ວ່າ, “ນິມິດຊຶ່ງພວກທ່ານໄດ້ເຫັນນັ້ນ ຢ່າໄດ້ບອກແກ່ຜູ້ໃດ ຈົນກວ່າບຸດມະ-
ນຸດຈະໄດ້ເປັນຄືນມາຈາກຕາຍ.”[10]ພວກສາວົກກໍທູນຖາມພຣະອົງວ່າ, “ດ້ວຍເຫດໃດພວກນັກທັມເຄີຍເວົ້າວ່າເອລີຢາຈະຕ້ອງມາກ່ອນ?”
[11]ພຣະອົງຊົງຕອບວ່າ, “ຈິງແທ້ ເອລີຢາຈະມາກ່ອນແລະເຮັດໃຫ້ສິ່ງທັງປວງຄືນສູ່ສະພາບເດີມ.[12]ແຕ່ເຮົາບອກພວກທ່ານວ່າ, ເອລີ-
ຢານັ້ນໄດ້ມາແລ້ວ ແລະເຂົາບໍ່ຮູ້ຈັກເພິ່ນ. ແຕ່ເຂົາໄດ້ເຮັດແກ່ເພິ່ນຕາມໃຈຊອບຕໍ່ເພິ່ນ ທໍານອງດຽວກັນ ບຸດມະນຸດກໍຈະຕ້ອງທົນທຸກທໍຣະ-
ມານດ້ວຍມືຂອງພວກເຂົາເຫມືອນກັນ’.”[13]ແລ້ວພວກສາວົກໄດ້ເຂົ້າໃຈວ່າ ພຣະອົງຊົງກ່າວກັບພວກເຂົາເຖິງເລື່ອງໂຢຮັນບັບຕິສະໂຕ.
[14]ເມື່ອພວກເຂົາໄດ້ມາເຖິງປະຊາຊົນທັງຫລາຍແລ້ວ ມີຊາຍຄົນຫນຶ່ງມາຫາພຣະອົງຄຸເຂົ່າລົງຕໍ່ຫນ້າພຣະອົງ ແລະທູນວ່າ,[15]“ນາຍເອີຍ,
ຂໍໂຜດເມດຕາລູກຊາຍຂອງຂ້ານ້ອຍແດ່ທ້ອນ ດ້ວຍວ່າລາວເປັນບ້າຫມູ ມີຄວາມທຸກລໍາບາກຫລາຍເພາະລາວຕົກໃສ່ໄຟໃສ່ນ້ໍາຫລາຍເທື່ອ.
[16]ແຕ່ພວກເຂົາບໍ່ສາມາດຮັກສາໃຫ້ເຊົາດີໄດ້.”
[17]ພຣະເຢຊູເຈົ້າຊົງຕອບວ່າ, “ໂອຄົນໃນສະໄຫມທີ່ຂາດຄວາມເຊື່ອແລະຊົ່ວຊ້າເອີຍ, ເຮົາຈະຕ້ອງຢູ່ກັບພວກເຈົ້າອີກເທິງປານໃດ?
ເຮົາຈະຕ້ອງອົດທົນກັບພວກເຈົ້ານານປານໃດ? ຈົ່ງພາລາວມາຫາເຮົາທີ່ນີ້ສາ.”[18]ພຣະເຢຊູເຈົ້າສັ່ງຜີມານຮ້າຍໃຫ້ອອກ ແລະມັນໄດ້ອອກຫນີໄປ
ແລ້ວເດັກນ້ອຍນັ້ນກໍດີປົກກະຕິ ຕັ້ງແຕ່ໂມງນັ້ນໄປ.
[19]ຈາກນັ້ນພວກສາວົກໄດ້ເຂົ້າມາຫາພຣະເຢຊູເຈົ້າຕ່າງຫາກແລະທູນຖາມວ່າ, “ເພາະເຫດໃດພວກຂ້າ-
ນ້ອຍຈຶ່ງຂັບໄລ່ຜີນັ້ນອອກບໍ່ໄດ້?”[20]ພຣະເຢຊູໄດ້ເວົ້າແກ່ພວກເຂົາວ່າ, “ເພາະພວກທ່ານມີຄວາມເຊື່ອຫນ້ອຍ.
ເຮົາບອກພວກທ່ານຕາມຄວາມຈິງວ່າ, ຖ້າພວກທ່ານມີຄວາມເຊື່ອທໍ່ກັບເມັດຜັກກາດເມັດຫນຶ່ງ, ພວກທ່ານຈະສາມາດສັ່ງພູຫນ່ວຍນີ້ວ່າ
‘ຈົ່ງເຄື່ອນຈາກບ່ອນນີ້ໄປຢູ່ບ່ອນນັ້ນ’ ມັນກໍຈະເຄື່ອນໄປ, ແລະບໍ່ມີສິ່ງໃດທີ່ທ່ານເຮັດບໍ່ໄດ້.[21]ແຕ່ຜີແບບນີ້ບໍ່ເຄີຍຖືກຂັບອອກ
ເວັ້ນໄວ້ແຕ່ດ້ວຍການພາວັນນາອະທິຖານແລະຖືສິນອົດອາຫານ.
[22]ຂະນະທີ່ພຣະເຢຊູເຈົ້າຍັງຄົງຢູ່ໃນແຂວງຄາລີເລ ພຣະອົງຊົງບອກບັນດາສາວົກຂອງພຣະອົງວ່າ, “ບຸດມະນຸດຈະຕ້ອງຖືກມອບໄວ້ໃນມືມະນຸດ.
[23]ເຂົາຈະຂ້າພຣະອົງເສັຽ ແລະໃນວັນຖ້ວນສາມພຣະອົງຈະຖືກຊົງບັນດານໃຫ້ເປັນຄືນມາ.” ພວກສາວົກກໍມີຄວາມທຸກຫນັກໃຈ.
[24]ເມື່ອມາເຖິງເມືອງກາເປນາອູມແລ້ວ ມີພວກເກັບຄ່າບໍາລຸງພຣະວິຫານມາຫາເປໂຕຖາມວ່າ, “ອາຈານຂອງພວກທ່ານບໍ່ເສັຽເງິນບໍາລຸງພຣະວິ-
ຫານບໍ?”[25]ເປໂຕຕອບວ່າ, “ເສັຽ” ເມື່ອເປໂຕເຂົ້າໄປໃນເຮືອນ ພຣະເຢຊູເຈົ້າຊົງກ່າວຂຶ້ນກ່ອນຖາມວ່າ, “ຊີໂມນເອີຍ, ເຈົ້າຄິດເຫັນເປັນຢ່າງໃດ?
ພວກເຈົ້າແຜ່ນດິນເຄີຍເກັບພາສີ ແລະເງິນສ່ວຍຈາກຜູ້ໃດ? ຈາກປະຊາຊົນຂອງພຣະອົງເອງ ຫລື ຈາກຄົນຕ່າງຊາດ?”.
[26]ເມື່ອເປໂຕທູນຕອບວ່າ, “ເຄີຍເກັບຈາກຄົນຕ່າງຊາດ” ພຣະເຢຊູຊົງກ່າວວ່າ, “ຖ້າຢ່າງນັ້ນ ປະຊາຊົນກໍບໍ່ຕ້ອງເສັຽ.
[27]ແຕ່ດັ່ງນັ້ນພວກເຮົາກໍບໍ່ໄດ້ເປັນເຫດໃຫ້ຄົນເກັບພາສີຕ້ອງເຮັດບາບ, ຈົ່ງໄປຕຶກເບັດທີ່ທະເລ ເມື່ອໄດ້ປາໂຕທໍາອິດຂຶ້ນມາໃຫ້ງະປາກມັນ
ແລ້ວທ່ານຈະພົບເງິນຫລຽນຫນຶ່ງ ຈົ່ງເອົາເງິນນັ້ນໄປເສັຽຄ່າບໍາລຸງພຣະວິຫານສໍາລັບເຮົາກັບທ່ານ.”

 generated on Tue Jun 17 19:01:42 2025

18 1ໃນເວລາດຽວກັນນັ້ນພວກສາວົກມາຫາພຣະເຢຊູເຈົ້າ ແລະທູນວ່າ, “ໃຜເປັນໃຫຍ່ທີ່ສຸດໃນຣາຊະອານາຈັກສະຫວັນ?”2ໃຫ້ຢືນຖ້າມ-
ກາງພວກເພິ່ນ.3ແລ້ວກ່າວວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານບໍ່ກັບໃຈ ແລະ ກາຍເປັນເຫມືອນເດັກນ້ອຍຄົນນີ້
ທ່ານຈະເຂົ້າໃນຣາຊະອານາຈັກສະຫວັນບໍ່ໄດ້ເລີຍ.

4ເຫດສະນັ້ນ, ຜູ້ໃດກໍຕາມທີ່ຖ່ອມຕົວລົງເຫມືອນເດັກນ້ອຍຜູ້ນີ້ ຜູ້ນັ້ນຈະເປັນໃຫຍ່ໃນຣາຊະອານາຈັກສະຫວັນ.
5ຖ້າຜູ້ໃດຈະຮັບເດັກນ້ອຍຜູ້ຫນຶ່ງຢ່າງນີ້ໄວ້ໃນນາມຂອງເຮົາ ຜູ້ນັ້ນກໍໄດ້ຮັບເຮົາ.6ແຕ່ຜູ້ໃດເຮັດໃຫ້ຄົນຫນຶ່ງໃນຫມູ່ເດັກນ້ອຍເຫລົ່ານີ້
ທີ່ເຊື່ອໃນເຮົາຫລົງຜິດ, ຈະດີກວ່າສໍາລັບເຂົາ ຖ້າເອົາຫີນໂມ້ແປ້ງກ້ອນໃຫຍ່ຜູກຄໍຜູ້ນັ້ນ, ແລະ ໃຫ້ຈົມລົງນ້ຳທະເລເລິກເສັຽ.
7ເພາະເຫດການລໍ້ລວງມະນຸດໃຫ້ຕົກໃນບາບ ທີ່ເວລາເຫຼົ່ານີ້ຈະເກີດຂຶ້ນ ແຕ່ວິບັດແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫລົງຜິດນັ້ນ.8ຖ້າມື ຫລື
ຕີນຂອງທ່ານເຮັດໃຫ້ຕົນຫລົງຜິດ ຈົ່ງຕັດຖິ້ມເສັຽ ທີ່ຈະເຂົ້າສູ່ຊີວິດດ້ວຍມືແລະຕີນກຸດຫລືພິການ. ຍັງດີກວ່າຖືກຖິ້ມໃສ່ໄຟທີ່ໄຫມ້ຢູ່ເປັນ-
ນິດທັງໆທີ່ຍັງມີມືຫລືຕີນສອງເບື້ອງ.
9ຖ້າດວງຕາຂອງທ່ານເຮັດໃຫ້ຕົນຫລົງຜິດ ຈົ່ງຄວັກອອກ ແລະ ຖິ້ມໄປໃຫ້ໄກເສັຽ ເພາະຈະດີສໍາລັບທ່ານທີ່ຈະເຂົ້າສູ່ຊີວິດດ້ວຍຕາເບື້ອງດຽວ
ແທນທີ່ຈະຖືກໂຍນລົງໄປໃນໄຟນະຮົກທັງໆ ທີ່ຍັງມີຕາຄົບສອງເບື້ອງ.”
10ຈົ່ງລະວັງໃຫ້ດີ ທ່ານຢ່າດູຫມິ່ນເດັກນ້ອຍຫມູ່ນີ້ຈັກຄົນຫນຶ່ງ. ເພາະເຮົາບອກພວກທ່ານວ່າ ເທວະດາປະຈໍາຂອງເຂົາໃນສະຫວັນເຝົ້າຢູ່ສະ-
ເຫມີ. ຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນ. ເພາະບຸດມະນຸດໄດ້ມາໂຜດເອົາຜູ້ທີ່ເລັກນ້ອຍເຫລົ່ານີ້ໃຫ້ພົ້ນ.
11ຍ້ອນວ່າບຸດມະນຸດໄດ້ມາໂຜດເອົາຜູ້ທີ່ຫລົງເສັຽໄປໃຫ້ພົ້ນ.
12ພວກທ່ານຄຶດເຫັນຢ່າງໃດ? ຖ້າຜູ້ຫນຶ່ງມີແກະຢູ່ຮ້ອຍໂຕ ແລະມີໂຕຫນຶ່ງຫລົງເສັຽໄປຈາກຝູງ, ຜູ້ນັ້ນຈະບໍ່ປະແກະເກົ້າສິບເກົ້າໂຕໄວ້ຢູ່ພູ ແລ້ວ-
ໄປຊອກຫາໂຕທີ່ຫລົງເສັຽໄປນັ້ນບໍ?13ຖ້າພົບແກະໂຕທີ່ເສັຽ ເຮົາບອກພວກທ່ານຕາມຄວາມຈິງວ່າ ຜູ້ນັ້ນຄົງມີຄວາມຊົມຊື່ນຍິນດີໃນແກະໂຕນັ້ນ
ຫລາຍກວ່າແກະເກົ້າສິບເກົ້າໂຕທີ່ບໍ່ຫລົງເສັຽໄປ.14ໃນທໍານອງດຽວກັນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສະຫວັນ ຈຶ່ງບໍ່ຊົງປາ-
ຖນາໃຫ້ເດັກນ້ອຍເຫລົ່ານີ້ຈິບຫາຍແມ່ນແຕ່ຄົນດຽວເລີຍ.”
15ຖ້າພີ່ນ້ອງຂອງທ່ານເຮັດຜິດບາບຕໍ່ທ່ານ, ຈົ່ງໄປແຈ້ງຄວາມຜິດນັ້ນແກ່ເພິ່ນສອງຕໍ່ສອງເທົ່ານັ້ນ. ຖ້າເພິ່ນຍອມຟັງ, ທ່ານກໍໄດ້ພີ່ນ້ອງຄືນມາ.
16ແຕ່ຖ້າເຂົາບໍ່ຍອມຟັງທ່ານ, ທ່ານຈຶ່ງເອົາຄົນຫນຶ່ງ ຫລື ສອງຄົນໄປນໍາ ໃຫ້ເປັນພະຍານ, ເພາະເຫດນັ້ນດ້ວຍ ສອງ ຫລື ສາມປາກ
ເພື່ອສາມາດຮັບຮອງຄໍາເວົ້າໄດ້ໂດຍພະຍານເຫລົ່ານັ້ນ.
17ແລະຖ້າເພິ່ນບໍ່ຍອມຟັງຄົນເຫລົ່ານັ້ນ ຈົ່ງໄປແຈ້ງຄວາມນັ້ນຕໍ່ຄຣິສຕະຈັກ. ຖ້າເພິ່ນບໍ່ຍອມຟັງຄຣິສຕະຈັກອີກ,
ກໍໃຫ້ຖືເສັຽວ່າເພິ່ນເປັນເຫມືອນຄົນບໍ່ເຊື່ອພຣະເຈົ້າແລະເປັນຄົນເກັບພາສີ.
18ເຮົາບອກພວກທ່ານຄວາມຈິງວ່າ ສິ່ງໃດກໍຕາມທີ່ພວກທ່ານຈະຜູກມັດໄວ້ ໃນໂລກ ກໍຈະຊົງຜູກມັດໄວ້ແລ້ວໃນສະຫວັນ;
ແລະສິ່ງໃດທີ່ພວກທ່ານຈະແກ້ ໃນໂລກ ກໍຈະຊົງແກ້ໃຫ້ຫລຸດເສັຽແລ້ວໃນສະຫວັນເຫມືອນກັນ.19ເຮົາບອກແກ່ພວກທ່ານວ່າ
ຫາກສອງຄົນໃນພວກທ່ານຈະຮ່ວມໃຈກັນຂໍສິ່ງຫນຶ່ງສິ່ງໃດໃນໂລກນີ້ ກໍຈະເປັນໄປຕາມນັ້ນສໍາລັບພວກເຂົາ ພຣະບິດາຂອງເຮົາຜູ້ຊົງສະ-
ຖິດຢູ່ໃນສະຫວັນກໍຈະຊົງກະທໍາໃຫ້.20ດ້ວຍວ່າມີສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ
ເຮົາກໍຢູ່ທ່າມກາງເຂົາຢູ່ບ່ອນນັ້ນແຫລະ.”
21ຈາກນັ້ນເປໂຕໄດ້ມາທູນຖາມພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍຄວນຈະຍົກໂທດໃຫ້ແກ່ພີ່ນ້ອງຂອງຂ້ານ້ອຍເຮັດຜິດຕໍ່ຂ້ານ້ອຍ
ຕ້ອງຍົກໂທດເຖິງຈັກເທື່ອບໍ? ຈົນຄົບເຈັດເທື່ອບໍ?”22ພຣະເຢຊູເຈົ້າຊົງຕອບວ່າ, “ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນ
ແຕ່ເຖິງເຈັດສິບເທື່ອຄູນກັບເຈັດ.
23ເຫດສະນັ້ນຣາຊະອານາຈັກສະຫວັນປຽບເຫມືອນເຈົ້າກະສັດອົງຫນຶ່ງ ຜູ້ຊົງປະສົງຢາກຄິດບັນຊີເງິນທີ່ພວກຂ້າໃຊ້ເປັນຫນີ້.
24ແມ່ນເຂົາເລີ່ມຕົ້ນຄິດໄລ່ບັນຊີຢູ່, ເຂົາພາຜູ້ຮັບໃຊ້ຜູ້ຫນຶ່ງ ທີ່ເປັນຫນີ້ເພິ່ນຫມື່ນຕາລັນຕົນມາຫາພຣະອົງ.25ແຕ່ເມື່ອລາວບໍ່ມີຫຍັງຈະໃຊ້ຫນີ້ຄືນ,
ນາຍຂອງເຂົາຈຶ່ງສັ່ງໃຫ້ຂາຍຕົວເຂົາ ລວມທັງເມັຽ ແລະ ລູກ ແລະ ບັນດາສິ່ງຂອງທີ່ເຂົາມີຢູ່ເອົາມາໃຊ້ຫນີ້ເສັຽ.
26ຄົນໃຊ້ຜູ້ນັ້ນຈຶ່ງຂາບລົງວອນຕໍ່ທ່ານວ່າ, ‘ໂອຍທ່ານເອີຍ, ຂໍຊົງໂຜດຜ່ອນຜັນຂ້ານ້ອຍກ່ອນ ແລ້ວຂ້ານ້ອຍຈະຫາໃຊ້ແທນໃຫ້ຫມົດ’.
27ກະສັດຄິດເມດຕາສົງສານ ລາວ. ດັ່ງນັ້ນເພິ່ນ ຈຶ່ງຍົກຫນີ້ໃຫ້ແລ້ວປ່ອຍໃຫ້ ລາວໄປ.
28ຕໍ່ມາຊາຍຜູ້ນີ້ກໍພົບເພື່ອນຜູ້ຫນຶ່ງທີ່ເປັນຂ້າໃຊ້ດ້ວຍກັນ, ຊຶ່ງເປັນຫນີ້ຕົນຫນຶ່ງຮ້ອຍເດນາຣິອົນ. ລາວຈຶ່ງຈັບເພື່ອນຄົນນັ້ນບີບຄໍ, ແລະເວົ້າວ່າ
‘ເງິນທີ່ມຶງເປັນຫນີ້ກູນັ້ນເອົາມາແທນເສັຽແມ.’29ແຕ່ຂ້ອຍໃຊ້ຜູ້ນັ້ນຈຶ່ງຂາບລົງອ້ອນວອນວ່າ ‘ຂໍຜ່ອນຜັນໃຫ້ເຮົາເສັຽກ່ອນທ້ອນ,
ແລ້ວເຮົາຈະໃຊ້ໃຫ້ທັງຫມົດ.’
30ແຕ່ຂ້າໃຊ້ຄົນທໍາອິດບໍ່ຍອມ ແລະຈັບລູກຫນີ້ຜູ້ນັ້ນໄປຂັງໄວ້ຈົນກວ່າຈະໃຊ້ຫນີ້ນັ້ນ.31ຝ່າຍພວກເພື່ອນຂ້າໃຊ້ດ້ວຍກັນ ເມື່ອໄດ້ເຫັນເຫດ-
ການຢ່າງນັ້ນກໍພາກັນໃຈຮ້າຍຫລາຍ ແລະນໍາເຫດການທັງປວງໄປກາບທູນຕໍ່ເຈົ້ານາຍໃນທຸກສິ່ງທີ່ເກີດຂຶ້ນ.
32ກະສັດຈຶ່ງເອີ້ນລາວມາ ແລະ ຊົງກ່າວວ່າ ‘ອ້າຍຂີ້ຂ້າຊາດຊົ່ວເອີຍ, ເຮົາໄດ້ຍົກຫນີ້ໃຫ້ເຈົ້າທັງຫມົດເພາະເຈົ້າໄດ້ອ້ອນວອນຂໍນໍາເຮົາ.
33ເຈົ້າຄວນຈະສົງສານເພື່ອນຂອງເຈົ້າເຫມືອນດັ່ງເຮົາໄດ້ສົງສານເຈົ້າບໍ່ແມ່ນບໍ?’
34ເຈົ້ານາຍອົງນັ້ນກໍຮ້າຍຫລາຍແລະມອບມັນໄວ້ແກ່ເຈົ້າຫນ້າທີ່ໃຫ້ທໍຣະມານຈົນກວ່າຈະໃຊ້ຫນີ້ໃຫ້ຫມົດ.35ດັ່ງນັ້ນພຣະບິ-
ດາເຈົ້າຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນ ກໍຈະເຮັດດັ່ງນັ້ນແກ່ພວກທ່ານທຸກຄົນ ຖ້າພວກທ່ານບໍ່ຍົກຄວາມຜິດໃຫ້ພີ່-
ນ້ອງຂອງຕົນດ້ວຍໃຈບໍຣິສຸດຂອງທ່ານເອງ.”

 generated on Tue Jun 17 19:01:42 2025

19 1ເມື່ອພຣະເຢຊູເຈົ້າຊົງກ່າວຄຳເຫລົ່ານີ້ຈົບລົງແລ້ວ ພຣະອົງໄດ້ສະເດັດຈາກແຂວງຄາລີເລ ເຂົ້າໄປໃນເຂດແດນແຂວງຢູ-
ດາຍຟາກແມ່ນ້ຳຈໍແດນເບື້ອງນັ້ນ. 2ແລະ ພຣະອົງໄດ້ຊົງໂຜດໃຫ້ເຂົາດີພະຍາດໃນທີ່ນັ້ນ.

3ພວກຟາຣີຊາຍໄດ້ເຂົ້າມາທົດລອງພຣະອົງທູນວ່າ, “ເປັນເລື່ອງທີ່ຖືກຕ້ອງຕາມກົດບັດຍັດຫລືບໍ
ຖ້າຜູ້ຊາຍຈະຢ່າຮ້າງກັບເມັຍເພາະເຫດໃດກໍຕາມ?” 4ພຣະເຢຊູເຈົ້າຊົງຕອບເຂົາວ່າ, “ພວກທ່ານບໍ່ໄດ້ອ່ານຫລືວ່າ ‘ພຣະຜູ້ຊົງສ້າງມະ-
ນຸດແຕ່ຕົ້ນເດີມໄດ້ຊົງສ້າງໃຫ້ເປັນຊາຍແລະຍິງໃຫ້ຄູ່ກັນ.’
5‘ດ້ວຍເຫດນັ້ນຜູ້ຊາຍຈຶ່ງລະພໍ່ແມ່ນຂອງຕົນໄປຜູກພັນຢູ່ກັບເມັຽ ແລະເຂົາທັງສອງຈະເປັນກາຍອັນດຽວກັນ.
6ດັ່ງນັ້ນພວກເຂົາຈຶ່ງບໍ່ເປັນສອງຕໍ່ໄປແຕ່ເປັນກາຍອັນດຽວ.’ ເພາະເຫດນີ້ພຣະເຈົ້າຜູ້ຜູກພັນໄວ້ຕໍ່ກັນແລ້ວນັ້ນ ຢ່າໃຫ້ມະ-
ນຸດເຮັດໃຫ້ພາກຈາກກັນເລີຍ.”
7ພວກເຂົາຈຶ່ງຍ້ອນຖາມພຣະອົງວ່າ, “ຖ້າຢ່າງນັ້ນເປັນຫຍັງໂມເຊຈຶ່ງສັ່ງໃຫ້ເຮັດຫນັງສືຢ່າຮ້າງ ແລະໃຫ້ປະເມັຽໄປໄດ້”. 8ພຣະ-
ອົງຊົງຕອບເຂົາວ່າ, “ກໍເພາະໃຈຂອງພວກທ່ານດື້ດ້ານຫລາຍ ໂມເຊຈຶ່ງຍອມອະນຸຍາດໃຫ້ພວກທ່ານປະເມັຽຂອງຕົນໄດ້
ແຕ່ເມື່ອຕົ້ນເດີມບໍ່ເປັນຢ່າງນັ້ນ. 9ຜູ້ໃດຈະປະເມັຽຂອງຕົນ, ໂດຍເມັຽບໍ່ເປັນຊູ້ກັບຊາຍອື່ນ ແລ້ວໄປເອົາເມັຽໃຫມ່
ຜູ້ນັ້ນມີຄວາມຜິດໃນຖານຫລິ້ນຊູ້ ແລະຜູ້ໃດຈະເອົາແມ່ຮ້າງນັ້ນມາເປັນເມັຽ ກໍຜິດໃນຖານຫລິ້ນຊູ້ເຫມືອນກັນ.”
10ພວກສາວົກຈຶ່ງທູນພຣະອົງວ່າ, “ຖ້າເປັນເຊັ່ນນັ້ນລະຫວ່າງຜົວເມັຽຂອງຕົນແລ້ວ
ການບໍ່ແຕ່ງງານກໍຈະດີກວ່າ.” 11“ບໍ່ແມ່ນຫມົດທຸກຄົນທີ່ຈະຮັບປະຕິບັດຕາມຂໍ້ນີ້ໄດ້ ເວັ້ນແຕ່ຜູ້ທີ່ຊົງໂຜດເທົ່ານັ້ນ. 12ຜູ້ທີ່ເປັນຫມັນແຕ່ເກີດກໍມີ
ຜູ້ທີ່ມະນຸດເຮັດໃຫ້ເປັນຫມັນກໍມີຜູ້ທີ່ເຮັດໃຫ້ຕົນເອງເປັນຫມັນເພາະເຫັນແກ່ຣາຊະອານາຈັກກໍມີ, ຜູ້ໃດທີ່ສາມາດຮັບປະຕິບັດໄດ້
ກໍໃຫ້ຮັບເອົາເຖີດ.”
13ຈາກນັ້ນພວກເຂົາໄດ້ພາພວກເດັກນ້ອຍໆມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງວາງພຣະຫັດແລະອະທິຖານເພື່ອເຂົາ, ແຕ່ພວກສາ-
ວົກໄດ້ຫ້າມປາມໄວ້. 14ແຕ່ພຣະເຢຊູເຈົ້າຊົງກ່າວວ່າ, “ຈົ່ງປ່ອຍໃຫ້ເດັກນ້ອຍມາຫາເຮົາ ຢ່າຂູ່ຫ້າມເຂົາ ເພາະວ່າຣາຊະອານາຈັກສະຫວັນ
ເປັນຂອງຄົນທີ່ເຫມືອນເດັກນ້ອຍເຫລົ່ານີ້ແຫລະ.” 15ພຣະອົງຊົງວາງພຣະຫັດໃສ່ພວກເດັກນ້ອຍແລ້ວ ກໍໄດ້ສະເດັດໄປຈາກບ່ອນນັ້ນ.
16ເບິ່ງແມ, ມີຄົນຫນຶ່ງເຂົ້າມາທູນພຣະອົງວ່າ, “ອາຈານເອີຍ, ຂ້ານ້ອຍຈະຕ້ອງເຮັດດີປະການໃດ ຈຶ່ງຈະໄດ້ຊີວິດອັນຕະຫລອດໄປເປັນ-
ນິດ?” 17ພຣະເຢຊູເຈົ້າຊົງຕອບວ່າ, “ເປັນຫຍັງທ່ານຖາມເຮົາເຖິງສິ່ງທີ່ດີ ຜູ້ດີມີແຕ່ຜູ້ດຽວ, ຖ້າທ່ານປາຖນາຈະເຂົ້າສູ່ຊີວິດ ໃຫ້ຖືຮັກສາຂໍ້ບັນ-
ຍັດທັງຫລາຍໄວ້.”
18ຊາຍຜູ້ນັ້ນທູນຖາມວ່າ, “ພຣະບັນຍັດຂໍ້ໃດ?” ພຣະເຢຊູຊົງຕອບວ່າ, “ຄືຂໍ້ທີ່ວ່າ ‘ຢ່າຂ້າຄົນ, ຢ່າລ່ວງປະເວນີ, ຢ່າລັກຊັບ, ແລະຢ່າເປັນພະ-
ຍານບໍ່ຈິງ. 19ແລະຈົ່ງຮັກເພື່ອນບ້ານເຫມືອນຮັກຕົວເອງ’.”
20ຊາຍຫນຸ່ມຜູ້ນັ້ນທູນຕອບພຣະອົງອີກວ່າ, “ຂໍ້ເຫລົ່ານັ້ນຂ້ານ້ອຍໄດ້ຖືຮັກສາມາແລ້ວ ຂ້ານ້ອຍຍັງຂາດສິ່ງໃດອີກ?” 21ພຣະເຢຊູເຈົ້າຊົງຕອບວ່າ,
“ຖ້າທ່ານປາຖນາຢາກເປັນຜູ້ດີຄົບຖ້ວນ ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ ແຈກຢາຍແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສະ-
ຫວັນ ແລະຈົ່ງຕາມເຮົາມາເສັຽ.” 22ແຕ່ເມື່ອຊາຍຫນຸ່ມໄດ້ຍິນດັ່ງນັ້ນກໍອອກໄປເປັນທຸກຫນັກໃຈ ເພາະຕົນມີຊັບສິ່ງຂອງຈຳນວນຫລາຍ.
23ພຣະເຢຊູເຈົ້າຊົງກ່າວກັບພວກສາວົກຂອງຕົນວ່າ, “ເຮົາບອກພວກທ່ານຕາມຄວາມຈິງວ່າ ຍາກເຫລືອເກີນທີ່ຄົນຮັ່ງມີຈະເຂົ້າໄປໃນຣາ-
ຊະອານາຈັກຂອງສະຫວັນ. 24ໂຕອູດຈະລອດຮູເຂັມກໍງ່າຍກວ່າຄົນຮັ່ງມີຄົນຫນຶ່ງຈະເຂົ້າໄປໃນອານາຈັກຂອງພຣະເຈົ້າ.”
25ເມື່ອພວກສາວົກໄດ້ຍິນດັ່ງນັ້ນກໍປະຫລາດໃຈຫລາຍ ແລະເວົ້າວ່າ, “ຖ້າຢ່າງນັ້ນ ໃຜຈະພົ້ນໄດ້?” 26“ຝ່າຍມະນຸດກໍເຫລືອກຳລັງທີ່ຈະເຮັດໄດ້
ແຕ່ສຳລັບພຣະເຈົ້າແລ້ວທຸກສິ່ງລ້ວນແຕ່ເປັນໄປໄດ້.” ແລ້ວເປໂຕທູນຕອບວ່າ, 27“ເບິ່ງແມ, ຂ້ານ້ອຍທັງຫລາຍໄດ້ສະ-
ຫລະຫມົດທຸກສິ່ງແລ້ວແລະໄດ້ຕິດຕາມພຣະອົງມາ ແລ້ວພວກຂ້ານ້ອຍຈະໄດ້ຫຍັງແດ່?”
28ພຣະເຢຊູເຈົ້າຊົງກ່າວກັບເຂົາວ່າ, “ເຮົາບອກພວກທ່ານຄວາມຈິງວ່າ ໃນໂລກໃຫມ່ຄາວເມື່ອບຸດມະນຸດຈະນັ່ງເທິງພຣະ-
ທີ່ນັ່ງອັນຮຸ່ງເຮືອງຂອງຕົນນັ້ນ ຝ່າຍພວກທ່ານກໍຈະນັ່ງເທິງບັນລັງສິບສອງບ່ອນ, ພິພາກສາທັງສິບສອງເຜົ່າຂອງອິສະຣາເອນ.
29ທຸກໆ ຄົນທີ່ໄດ້ສະຫລະເຮືອນຊານ, ອ້າຍເອື້ອຍນ້ອງ, ພໍ່ແມ່, ລູກ, ຫລືໄຮ່ນາເພາະເຫັນແກ່ນາມຂອງເຮົາ,
ຜູ້ນັ້ນຈະໄດ້ຮັບຜົນຕອບແທນຮ້ອຍທໍ່ ແລະຈະໄດ້ຮັບມໍຣະດົກຄືຊີວິດອັນຕະຫລອດໄປເປັນນິດ. 30ແລະຜູ້ທີ່ເປັນປາຍຈະກັບເປັນຕົ້ນ.”

20 [1]ເພາະວ່າຣາຊະອານາຈັກສະຫວັນປຽບເຫມືອນພໍ່ເຮືອນຜູ້ຫນຶ່ງທີ່ອອກໄປແຕ່ເຊົ້າ ເພື່ອຈ້າງຄົນມາທຳງານໃນສວນອະງຸ່ນຂອງຕົນ.
[2]ຄັນຕົກລົງກັບລູກຈ້າງວັນລະຫນຶ່ງເດນາຣິອົນແລ້ວ ຈຶ່ງໃຊ້ໃຫ້ໄປທຳງານໃນສວນອະງຸ່ນຂອງຕົນ.

[3]ໃນເວລາເກົ້າໂມງເຊົ້າ ເຈົ້າຂອງສວນກໍອອກໄປອີກ ແລະພົບຄົນອື່ນຢືນຢູ່ລ້າກາງຕະຫລາດ.[4]'ພວກເຈົ້າຈົ່ງໄປທຳງານໃນສວນອະ-
ງຸ່ນຂອງຂ້ອຍເຫມືອນກັນ ແລະຂ້ອຍຈະໃຫ້ຄ່າຈ້າງແກ່ພວກເຈົ້າຕາມສົມຄວນ.' ດັ່ງນັ້ນພວກເຂົາກໍພາກັນໄປເຮັດວຽກ.
[5]ອີກຄັ້ງຫນຶ່ງ ເພິ່ນກໍອອກໄປເມື່ອປະມານເວລາທ່ຽງແລະບ່າຍສາມໂມງ ເພິ່ນກໍອອກໄປອີກເຮັດເຫມືອນແຕ່ກ່ອນ.[6]ພໍຕອນຫ້າໂມງແລງ
ເພິ່ນກໍອອກໄປອີກເທື່ອຫນຶ່ງແລະພົບອີກພວກຫນຶ່ງຢືນຢູ່ຈຶ່ງຖາມເຂົາວ່າ 'ເປັນຫຍັງພວກເຈົ້າຈຶ່ງຢືນຢູ່ນີ້ຫມົດມື້ລ້າ
ໆ?'[7]'ເພາະບໍ່ມີຜູ້ໃດຈ້າງພວກເຮົາ.' ເພິ່ນຈຶ່ງບອກເຂົາວ່າ, 'ພວກເຈົ້າຈົ່ງໄປທຳງານໃນສວນອະງຸ່ນເຫມືອນກັນ.'
[8]ຄັນເຖິງເວລາຄ່ຳແລງແລ້ວ, ເຈົ້າຂອງສວນອະງຸ່ນຈຶ່ງບອກເຈົ້າພະນັກງານວ່າ 'ຈົ່ງເອີ້ນພວກຄົນງານມາ ແລ້ວໃຫ້ຄ່າຈ້າງແກ່ເຂົາ ຕັ້ງ-
ແຕ່ຜູ້ທຳງານສຸດທ້າຍຈົນເຖິງຜູ້ມາກ່ອນ.'[9]ເຂົາແຕ່ລະຄົນໄດ້ຮັບຄ່າຈ້າງຄົນລະຫນຶ່ງເດນາຣິອົນ.[10]ເມື່ອພວກຄົນງານທີ່ມາກ່ອນເຫັນ
ກໍນຶກວ່າຄົງຈະໄດ້ຮັບຫລາຍກວ່ານັ້ນ, ແຕ່ກໍໄດ້ຮັບຄົນລະຫນຶ່ງເດນາຣິອົນເຫມືອນກັນ.
[11]ເມື່ອໄດ້ຮັບເງິນແລ້ວເຂົາກໍຈົ່ມຕໍ່ເຈົ້າຂອງສວນ.[12]ພວກເຂົາເວົ້າວ່າ 'ພວກທີ່ມາຕາມຫລັງເຮັດວຽກໄດ້ແຕ່ຊົ່ວໂມງດຽວ
ແຕ່ທ່ານໄດ້ໃຫ້ເຂົາທໍ່ກັນກັບພວກຂ້ານ້ອຍ ທີ່ອົດທຳງານຫນັກຕາກແດດຮ້ອນຕະຫລອດວັນ.'
[13]ແຕ່ເຈົ້າຂອງສວນໄດ້ຕອບໂດຍກ່າວກັບຄົນຫນຶ່ງໃນພວກເຂົາວ່າ 'ສະຫາຍເອີຍ, ຂ້ອຍບໍ່ໄດ້ເຮັດຜິດຕໍ່ເຈົ້າດອກ. ເຈົ້າໄດ້ຕົກ-
ລົງກັນແລ້ວກັບຂ້ອຍວັນລະຫນຶ່ງເດນາຣິອົນ ບໍ່ແມ່ນຫລື?[14]ສ່ວນທີ່ຕົກເປັນຂອງເຈົ້າຈົ່ງເອົາໄປເສັຽ. ຂ້ອຍພໍ-
ໃຈຈະໃຫ້ຄ່າຈ້າງຄົນງານກຸ່ມທີ່ເຂົ້າການສຸດທ້າຍນີ້ ທໍ່ກັນກັບເຈົ້າ.
[15]ຂ້ອຍມີສິດທີ່ຈະໃຊ້ເງິນຄຳຂອງຂ້ອຍຕາມໃຈຂອງຂ້ອຍ ບໍ່ຄວນບໍ? ເປັນຫຍັງເຈົ້າອິດສາເມື່ອເຫັນຂ້ອຍໃຈດີ?'[16]ແລະຜູ້ເປັນ-
ຕົ້ນຈະກັບເປັນປາຍ."
[17]ເມື່ອພຣະເຢຊູເຈົ້າກຳລັງສະເດັດຂຶ້ນເມືອນະຄອນເຢຣູຊາເລັມ, ພຣະອົງກໍຊົງພາພວກສາ-
ວົກສິບສອງຄົນໄປເປັນຫມູ່ຕ່າງຫາກແລະຕາມທາງນັ້ນພຣະອົງຊົງບອກເຂົາວ່າ.[18]ພວກເຮົາກຳລັງຂຶ້ນເມືອນະຄອນເຢຣູຊາເລັມ,
ແລະບຸດມະນຸດຈະຖືກມອບໄວ້ກັບພວກປະໂລຫິດຕົນໃຫຍ່ແລະພວກນັກທັມ. ພວກເຫລົ່ານີ້ຈະຕັດສິນລົງໂທດຈົນເຖິງແກ່ຊີ-
ວິດ[19]ແລະຈະມອບໄວ້ກັບຄົນຕ່າງຊາດໃຫ້ເຍາະເຍີ້ຍ, ຂ້ຽນຕີ ແລະຕອກຕິດແຂນໄວ້ທີ່ໄມ້ກາງແຂນ. ແຕ່ໃນວັນຖ້ວນສາມເພິ່ນຈະຖືກຊົງບັນ-
ດານໃຫ້ເປັນຄືນມາໃຫມ່."
[20]ຈາກນັ້ນມານດາຂອງລູກຊາຍເຊເບດາຍພາລູກທັງສອງຂອງຕົນມາຫາພຣະອົງ. ນາງຂາບໄຫວ້ຕໍ່ຫນ້າພຣະອົງ ແລະທູນຂໍບາງສິ່ງຈາກພຣະ-
ອົງ.[21]ພຣະເຢຊູເຈົ້າຈຶ່ງຊົງຖາມນາງວ່າ, "ນາງປາຖນາສິ່ງໃດ?" ນາງທູນຕອບວ່າ, "ຂໍທ່ານຮັບສັ່ງໃຫ້ລູກຊາຍຂອງຂ້ານ້ອຍສອງຄົນນີ້ນັ່ງໃນອາ-
ນາຈັກຂອງທ່ານ ເບື້ອງຂວາຜູ້ຫນຶ່ງ ເບື້ອງຊ້າຍຜູ້ຫນຶ່ງ ແດ່ທ້ອນ."
[22]ແຕ່ພຣະ-
ເຢຊູຊົງຕອບວ່າ, "ພວກທ່ານບໍ່ເຂົ້າໃຈໃນສິ່ງທີ່ທ່ານຂໍນັ້ນ. ຈອກທີ່ເຮົາກຳລັງຈະດື່ມນັ້ນທ່ານຈະດື່ມໄດ້ບໍ?" ເຂົາທູນຕອບວ່າ, 'ໄດ້ຢູ່ຂ້າ-
ນ້ອຍ."[23]ພຣະອົງຊົງກ່າວກັບເຂົາວ່າ, "ພວກທ່ານຈະດື່ມຈອກຂອງເຮົາກໍຈິງຢູ່ ແຕ່ທີ່ຈະນັ່ງເບື້ອງຂວາແລະເບື້ອງຊ້າຍຂອງເຮົານັ້ນ ບໍ່ແມ່ນຫນ້າ-
ທີ່ຂອງເຮົາຈະຈັດໃຫ້, ແຕ່ພຣະບິດາຂອງເຮົາຊົງຈັດແຈງໄວ້ສຳລັບຜູ້ໃດກໍເປັນຂອງຜູ້ນັ້ນ."[24]ເມື່ອພວກສາວົກສິບຄົນໄດ້ຍິນດັ່ງນັ້ນແລ້ວ
ກໍມີຄວາມເຄືອງໃຈເພາະອ້າຍນ້ອງສອງຄົນນັ້ນ.
[25]ແຕ່ພຣະເຢຊູເຈົ້າຊົງເອີ້ນເຂົາມາແລ້ວກ່າວວ່າ, "ພວກທ່ານຮູ້ຢູ່ວ່າພວກຜູ້ຄຸ້ມຄອງຄົນຕ່າງຊາດກໍບັງຄັບໃຫ້ຄົນທັງຫລາຍຕ້ອງເຊື່ອຟັງພວກເຂົາ
ແລະພວກຜູ້ໃຫຍ່ກໍໃຊ້ອຳນາດເຫນືອເຂົາ.[26]ຜູ້ໃດຢາກເກີດເປັນໃຫຍ່ໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຜູ້ຮັບໃຊ້ແທນ.
[27]ແລະຖ້າຜູ້ໃດຢາກເປັນເອກຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງພວກທ່ານ.[28]ເຫມືອນຢ່າງບຸດມະນຸດບໍ່ໄດ້ມາໃຫ້ຄົນອື່ນຮັບໃຊ້
ແຕ່ໄດ້ມາເພື່ອຈະບົວລະບັດເຂົາ ແລະປຣະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ."
[29]ເມື່ອພວກເຂົາອອກໄປຈາກເມືອງເຢຣິໂກ, ມີປະຊາຊົນຈຳນວນຫລາຍໄດ້ຕາມພຣະອົງໄປ.
[30]ມີຊາຍຕາບອດສອງຄົນທີ່ນັ່ງຢູ່ແຄມທາງເມື່ອໄດ້ຍິນວ່າພຣະເຢຊູເຈົ້າສະເດັດກາຍມາເຂົາຈຶ່ງຮ້ອງຂຶ້ນວ່າ "ທ່ານຜູ້ເປັນບຸດດາວິດເອີຍ,
ຂໍຈົ່ງເມດຕາພວກຂ້ານ້ອຍແດ່ຖ້ອນ."[31]ແຕ່ເຂົາແຮ່ງຊ້ຳຮ້ອງດັ່ງຂຶ້ນວ່າ, "ທ່ານຜູ້ເປັນບຸດດາວິດເອີຍ, ຂໍຈົ່ງເມດຕາພວກຂ້ານ້ອຍແດ່ຖ້ອນ."
[32]ແລ້ວພຣະເຢຊູເຈົ້າຊົງຢຸດຢູ່ແລະເອີ້ນເຂົາມາແລ້ວຊົງຖາມເຂົາວ່າ, "ພວກເຈົ້າຢາກໃຫ້ເຮົາເຮັດຫຍັງເພື່ອເຈົ້າ?"[33]ພວກເຂົາຈຶ່ງທູນຕອບວ່າ,
"ອົງພຣະຜູ້ເປັນເຈົ້າ, ຂໍໂຜດເຮັດໃຫ້ຕາຂອງພວກຂ້ານ້ອຍມືນເຫັນຮຸ່ງແດ່ຖ້ອນ."[34]ພຣະເຢຊູເຈົ້າສົງສານພວກເຂົາຈຶ່ງຊົງບາຍຕາຂອງເຂົາ
ໃນທັນໃດນັ້ນເຂົາກໍເຫັນຮຸ່ງແລະຕິດຕາມພຣະອົງໄປ.

 generated on Tue Jun 17 19:01:42 2025

21 1ເມື່ອພຣະເຢຊູເຈົ້າແລະພວກສາວົກຂອງພຣະອົງມາໃກ້ນະຄອນເຢຣູຊາເລັມ, ແລະມາເຖິງບ້ານເບັດຟາເຄ ທີ່ພູຫມາກກອກເທດ, ພຣະ-
ເຢຊູໄດ້ຊົງໃຊ້ສາວົກສອງຄົນໄປ, 2ໂດຍຊົງສັ່ງເຂົາວ່າ, “ຈົ່ງເຂົ້າໄປໃນບ້ານທີ່ຢູ່ຕໍ່ຫນ້າທ່ານ
ແລ້ວທ່ານຈະພົບລໍແມ່ໂຕຫນຶ່ງທີ່ຖືກມັດໄວ້ຢູ່ກັບລູກຂອງມັນ. ຈົ່ງແກ້ຈູງມາໃຫ້ເຮົາ. 3‘ອົງພຣະຜູ້ເປັນເຈົ້າຈໍາເປັນຕ້ອງໃຊ້ພວກມັນ’
ແລ້ວຄົນນັ້ນຈະປ່ອຍພວກມັນໃຫ້ມາກັບພວກທ່ານໂດຍທັນທີ.”

4ເຫດການໄດ້ເກີດຂຶ້ນເພື່ອໃຫ້ສໍາເລັດ ຕາມທີ່ຜູ້ທໍານວາຍກ່າວໄວ້ວ່າ, 5“ຈົ່ງບອກແກ່ລູກສາວຂອງເມືອງຊີໂອນວ່າ ‘ເບິ່ງແມ,
ກະສັດຂອງທ່ານກໍາລັງສະເດັດມາຫາທ່ານ ກະສັດຜູ້ມີພຣະທັຍອ່ອນສຸພາບ ແລະຊົງປຣະທັບເທິງຫລັງລໍ ໂຕຫນຶ່ງ
ເຊິ່ງເປັນລູກລໍທີ່ຫາກໍເກີດຈາກທ້ອງແມ່ມັນ’.”
6ຈາກນັ້ນພວກສາວົກສອງຄົນນັ້ນກໍໄປເຮັດຕາມທີ່ພຣະເຢຊູຊົງສັ່ງສອນພວກເຂົາ, 7ຈຶ່ງຈູງລໍແມ່ກັບລູກມັນມາ
ແລະເອົາເສື້ອຜ້າຂອງຕົນຢູ່ເທິງຫລັງມັນ ແລ້ວພຣະອົງໄດ້ຊົງຂຶ້ນປຣະທັບ. 8ປະຊາຊົນສ່ວນຫລາຍໄດ້ເອົາເສື້ອຜ້າຂອງຕົນປູຕາມຫົນທາງ
ບາງຄົນກໍຕັດຝົດໄມ້ມາປູຕາມທາງ.
9ຝ່າຍຝູງຄົນທີ່ຍ່າງໄປກ່ອນກັບຜູ້ທີ່ມາຕາມຫລັງໄດ້ໂຫ່ຮ້ອງວ່າ, “ໂຮຊັນນາ ແກ່ຣາຊະບຸດຂອງດາວິດ ສາທຸການແດ່ຜູ້ທີ່ສະເດັດມາໃນພຣະ-
ນາມຂອງອົງພຣະຜູ້ເປັນເຈົ້າຈຶ່ງຊົງພຣະຈະເຣີນ ໂຮຊັນນາໃນທີ່ສູງສຸດ.” 10ເມື່ອພຣະເຢຊູເຈົ້າເຂົ້າໄປໃນນະຄອນເຢຣູຊາເລັມແລ້ວ ປະຊາ-
ຊົນທົ່ວທັງນະຄອນກໍພາກັນແຕກຕື່ນຖາມກັນວ່າ, “ຄົນນີ້ແມ່ນຜູ້ໃດ?” 11“ນີ້ຄືພຣະເຢຊູເຈົ້າຜູ້ປະກາດພຣະທັມ ຊຶ່ງມາຈາກເມືອງນາຊາ-
ເຣັດແຂວງຄາລີເລ.”
12ຈາກນັ້ນພຣະເຢຊູເຈົ້າໄດ້ສະເດັດເຂົ້າໄປໃນບໍຣິເວນພຣະວິຫານ. ພຣະອົງຊົງຂັບໄລ່ບັນດາຜູ້ຊື້ຂາຍໃນບໍຣິເວນພຣະວິຫານນັ້ນອອກເສັຽ
ແລະຂວ້ຳໂຕະຜູ້ແລກເງິນກັບທັງບ່ອນນັ່ງຂອງຜູ້ຂາຍນົກເຂົາເສັຽ. 13“ມີຄໍາຂຽນໄວ້ໃນພຣະຄັມພີວ່າ, ‘ວິຫານຂອງເຮົາ ເຂົາຈະເອີ້ນວ່າເປັນສະ-
ຖານທີ່ໄຫວ້ວອນ’ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນ ‘ຖ້ຳຂອງໂຈນ’.” 14ພວກຄົນຕາບອດແລະຄົນຂາເສັ້ງກໍພາກັນມາຫາພຣະອົງໃນບໍ-
ຣິເວນພຣະວິຫານ, ແລະພຣະອົງໄດ້ຊົງໂຜດໃຫ້ເຂົາດີຫມົດ.
15ແຕ່ເມື່ອພວກປະໂລຫິດຕົນໃຫຍ່ແລະພວກນັກທັມໄດ້ເຫັນການອັດສະຈັນທີ່ພຣະອົງຊົງເຮັດນັ້ນ, ແລະທັງໄດ້ຍິນພວກເດັກນ້ອຍຮ້ອງຂຶ້ນໃນບໍຣິ-
ເວນພຣະວິຫານວ່າ, “ໂຮຊັນນາແກ່ຣາຊະບຸດຂອງດາວິດ” ເຂົາກໍພາກັນເຄືອງແຄ້ນໃຈ. 16ພວກເຂົາຈຶ່ງທູນຖາມພຣະອົງວ່າ,
“ເຈົ້າບໍ່ໄດ້ຍິນຄໍາທີ່ເຂົາຮ້ອງຢູ່ບໍ?” ພຣະເຢຊູຊົງເຈົ້າຕອບວ່າ, “ໄດ້ຍິນແລ້ວ ພວກເຈົ້າບໍ່ໄດ້ອ່ານຈັກເທື່ອຫລືຄໍາທີ່ວ່າ, ‘ພຣະອົງຊົງຈັດໃຫ້ຄໍາສັນ-
ຣະເສີນອັນແທ້ຈິງອອກມາຈາກປາກຂອງເດັກນ້ອຍແລະແອນ້ອຍຜູ້ທີ່ຍັງກິນນົມຢູ່’.” 17ແລ້ວພຣະເຢຊູເຈົ້າກໍສະເດັດອອກຈາກເມືອງໄປປະ-
ທັບຢູ່ບ້ານເບັດທານີ ແລ້ວຊົງຄ້າງຄືນທີ່ນັ້ນ.
18ຂະນະທີ່ພຣະເຢຊູເຈົ້າສະເດັດກັບຄືນເຂົ້າໄປໃນນະຄອນພຣະອົງຊົງຫິວອາຫານ. 19ເມື່ອທອດພຣະເນດເຫັນຕົ້ນເດື່ອເທດຕົ້ນຫນຶ່ງຢູ່ແຄມທາງ
ພຣະອົງກໍສະເດັດເຂົ້າໄປໃກ້ ເມື່ອຊົງເຫັນບໍ່ມີຫມາກ ມີແຕ່ໃບເທົ່ານັ້ນ ພຣະອົງຈຶ່ງຊົງກ່າວແກ່ຕົ້ນນັ້ນວ່າ, “ຈົ່ງຢ່າໄດ້ເກີດຫມາກຕໍ່ໄປຈັກເທື່ອ”
ແລະຕົ້ນເດື່ອກໍຫ່ຽວແຫ້ງລົງໃນທັນທີ.
20ເມື່ອພວກສາວົກເຫັນດັ່ງນັ້ນກໍປະຫລາດໃຈ ແລະເວົ້າກັນວ່າ, “ເປັນໄດ້ຢ່າງໃດ ຕົ້ນເດື່ອນັ້ນຈຶ່ງຫ່ຽວແຫ້ງໄປໃນທັນທີ?” 21ພຣະ-
ເຢຊູເຈົ້າຕອບວ່າ, “ເຮົາ ບອກພວກເຈົ້າຄວາມຈິງວ່າ ຖ້າພວກທ່ານຫາກມີຄວາມເຊື່ອ ແລະ ບໍ່ສົງໄສເລີຍ
ທ່ານຈະເຮັດໄດ້ຢ່າງທີ່ເຮົາໄດ້ເຮັດແກ່ຕົ້ນເດື່ອນີ້ ແລະ ບໍ່ພຽງເທົ່ານັ້ນ ແຕ່ວ່າທ່ານຈະບອກພູນີ້ວ່າ ຈົ່ງຍ້າຍໄປຕົກລົງນ້ຳທະເລເສັຽ
ກໍຈະເປັນໄປດັ່ງນັ້ນ. 22ທຸກສິ່ງທີ່ພວກເຈົ້າທູນຂໍ ພາວັນນາອະທິຖານ ພວກເຈົ້າມີຄວາມເຊື່ອ, ພວກເຈົ້າກໍຈະໄດ້ຮັບ ໃນສິ່ງນັ້ນ.”
23ເມື່ອພຣະເຢຊູເຈົ້າສະເດັດເຂົ້າໄປໃນບໍຣິເວນພຣະວິຫານ ໃນເວລາທີ່ຊົງສັ່ງສອນຢູ່ນັ້ນ ພວກປະໂລຫິດຕົນໃຫຍ່ແລະພວກເຖົ້າແກ່ແຫ່ງພົນລະ-
ເມືອງໄດ້ມາທູນຖາມພຣະອົງວ່າ, “ທ່ານເຮັດສິ່ງເຫລົ່ານີ້ໂດຍສິດອໍານາດອັນໃດ? ແລະໃຜໃຫ້ສິດນີ້ແກ່ເຈົ້າ?” 24ພຣະເຢຊູເຈົ້າຊົງຕອບເຂົາວ່າ,
“ເຮົາກໍຈະຖາມພວກທ່ານສິ່ງຫນຶ່ງເຫມືອນກັນ ຖ້າທ່ານຕອບໄດ້ເຮົາຈະບອກພວກທ່ານວ່າ ເຮົາເຮັດການນີ້ດ້ວຍສິດອໍານາດຈາກຜູ້ໃດ.
25ການບັບຕິສະມາຂອງໂຢຮັນນັ້ນມາຈາກໃສ? ມາຈາກສະຫວັນຫລືຈາກມະນຸດ?” ພວກເຂົາໄດ້ປຶກສາທ່າມກາງກັນເອງ ໂດຍເວົ້າວ່າ,
“ຖ້າເຮົາຈະຕອບວ່າ ‘ມາຈາກສະຫວັນ’ ລາວຄົງຈະຖາມເຮົາວ່າ ‘ດ້ວຍເຫດໃດພວກທ່ານຈຶ່ງບໍ່ເຊື່ອໂຢຮັນ.’ 26ຖ້າພວກເຮົາວ່າ‘ມາຈາກມະນຸດ’
ກໍຢ້ານປະຊາຊົນ ເພາະປະຊາຊົນທັງປວງຖືວ່າໂຢຮັນເປັນຜູ້ປະກາດພຣະທັມ.” 27“ພວກເຮົາບໍ່ຮູ້” ພຣະອົງຈຶ່ງຊົງບອກເຂົາວ່າ, “ຖ້າເຊັ່ນນັ້ນ
ເຮົາກໍຈະບໍ່ບອກພວກທ່ານເຫມືອນກັນວ່າ ເຮົາເຮັດການນີ້ດ້ວຍສິດອໍານາດໃດ.”
28ແຕ່ທ່ານຄິດຢ່າງໃດ? ຊາຍຜູ້ຫນຶ່ງມີລູກຊາຍສອງຄົນ. ລາວໄປຫາລູກກົກບອກວ່າ ‘ລູກເອີຍ, ຈົ່ງໄປເຮັດວຽກໃນສວນອະງຸ່ນມື້-
ນີ້ເນີ.’ 29ເຂົາຕອບພໍ່ວ່າ ‘ລູກບໍ່ໄປ’, ແຕ່ພາຍລຸນມາໄດ້ປ່ຽນໃຈ ແລະ ກໍໄປເຮັດວຽກ. 30ແລະ ພໍ່ຈຶ່ງໄປຫາລູກຜູ້ທີ່ສອງເວົ້າຢ່າງດຽວກັນ
ລູກຜູ້ນີ້ຕອບວ່າ ‘ຂ້ານ້ອຍຈະໄປ’ ແຕ່ເຂົາກໍບໍ່ໄປ.
31ໃນລູກຊາຍສອງຄົນນີ້ແມ່ນຜູ້ໃດເຮັດຕາມໃຈຂອງພໍ່” ພວກເຂົາທູນຕອບວ່າ, “ແມ່ນລູກກົກນັ້ນ” ພຣະເຢຊູຊົງເຈົ້າກ່າວກັບເຂົາວ່າ,
“ເຮົາບອກພວກທ່ານຄວາມຈິງວ່າ ພວກເກັບພາສີແລະຍິງແມ່ຈ້າງກໍກໍາລັງເຂົ້າໃນຣາຊະອານາຈັກຂອງພຣະເຈົ້າກ່ອນພວກທ່ານ.
32ແຕ່ພວກທ່ານບໍ່ໄດ້ເຊື່ອ ສ່ວນພວກເກັບພາສີແລະຍິງແມ່ຈ້າງໄດ້ເຊື່ອເພິ່ນ. ແລະພວກທ່ານ ເມື່ອໄດ້ເຫັນສິ່ງທີ່ເກີດຂຶ້ນແລ້ວ
ກໍຍັງບໍ່ກັບໃຈທີ່ຫລັງແລະເຊື່ອເພິ່ນ.”
33ຈົ່ງຟັງຄໍາອຸປະມາເລື່ອງຫນຶ່ງອີກ ຄືມີພໍ່ເຮືອນຜູ້ຫນຶ່ງໄດ້ເຮັດສວນອະງຸ່ນ ແລ້ວອ້ອມຮົ້ວໄວ້ ເພິ່ນໄດ້ສະກັດອ່າງຢຽບຫມາກອະງຸ່ນເອົານ້ຳ
ແລະສ້າງຫໍເຝົ້າໃຫ້ຊາວສວນເຊົ່າ. ຈາກນັ້ນຕົນກໍອອກໄປຕ່າງປະເທດ. 34ເພິ່ນຈຶ່ງໃຊ້ຂ້ອຍໃຊ້ໄປຫາພວກເຊົ່າສວນນັ້ນ
ເພື່ອຈະຮັບຜົນອະງຸ່ນຂອງຕົນ.
35ແຕ່ຝ່າຍຄົນເຊົ່າສວນນັ້ນໄດ້ຈັບຂ້ອຍໃຊ້ຂອງເພິ່ນ ຂ້ຽນຕີຜູ້ຫນຶ່ງ, ຂ້າເສັຽຜູ້ຫນຶ່ງ, ແລະ ເອົາຫີນຄວ່າງໃສ່ຜູ້ຫນຶ່ງ.
36ແຕ່ຄົນເຝົ້າສວນໄດ້ເຮັດແກ່ເຂົາຢ່າງດຽວກັນ. 37ຫລັງຈາກນັ້ນ, ເຈົ້າຂອງສວນໄດ້ໃຊ້ລູກຊາຍຂອງຕົນມາ ໂດຍຄິດວ່າ ‘ເຂົາຄົງຈະນັບ-
ຖືລູກຊາຍຂອງເຮົາ,’
38ແຕ່ເມື່ອພວກເຊົ່າສວນເຫັນລູກຊາຍຂອງເພິ່ນມາ ພວກເຂົາກໍເວົ້າກັນວ່າ ‘ຜູ້ນີ້ແຫລະ, ເປັນເຈົ້າມໍຣະດົກ. ມາເຖີດໃຫ້ພວກເຮົາຂ້າມັນເສັຽ
ແລ້ວຍຶດເອົາສັບສິນເຫລົ່ານີ້ແທນ.’ 39ດັ່ງນັ້ນພວກເຂົາຈຶ່ງຈັບລູກຊາຍຂອງເຈົ້າຂອງສວນໂຍນຖິ້ມອອກນອກສວນແລະຂ້າລາວເສັຽ.

[40]ບັດນີ້ ເມື່ອເຈົ້າຂອງສວນມາ, ແລ້ວທ່ານຈະເຮັດຢ່າງໃດແກ່ຄົນເຊົ່າສວນເຫລົ່ານັ້ນ.”[41]“ທ່ານຈະລົງໂທດຢ່າງຮ້າຍແຮງໃສ່ຄົນຊົ່ວເຫລົ່າ-
ນັ້ນດ້ວຍວິທີຮຸນແຮງ ແລ້ວຈະເອົາສວນອະງຸ່ນນັ້ນໃຫ້ຜູ້ອື່ນເຊົ່າ ຊຶ່ງຈະນຳຜົນມາສົ່ງໃຫ້ເພິ່ນເມື່ອເຖິງຣະດູເກັບກ່ຽວ.”
[42]ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ, “ພວກທ່ານຍັງບໍ່ໄດ້ອ່ານໃນພຣະຄັມພີຫລືທີ່ວ່າ, 'ຫີນທີ່ນາຍຊ່າງໄດ້ປະຕິເສດ
ຖືກເຮັດໃຫ້ກາຍເປັນຫີນເສົາເອກແລ້ວ. ການນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ, ເປັນການປະຫລາດແກ່ຕາຂອງເຮົາ.”
[43]ດ້ວຍເຫດນັ້ນ ເຮົາບອກພວກທ່ານວ່າ ຣາຊະອານາຈັກຂອງພຣະເຈົ້າ ຈະຊົງຍົກເອົາໄປຈາກພວກທ່ານ ແລະຊົງປຣະ-
ທານແກ່ຊົນຊາດຫນຶ່ງທີ່ຈະໃຫ້ຜົນ.[44]ຜູ້ໃດກໍຕາມທີ່ລົ້ມທັບຫີນນີ້ ຜູ້ນັ້ນຈະຕ້ອງແຕກຫັກເປັນປ່ຽງ ໆ. ແຕ່ຫີນນັ້ນຈະຕົກທັບຜູ້ໃດ
ຜູ້ນັ້ນຈະແຫລກມຸ່ນ.”
[45]ເມື່ອພວກປະໂລຫິດຕົ້ນໃຫຍ່ກັບພວກຟາຣີຊາຍ ໄດ້ຍິນຄຳອຸປະມາຂອງພຣະອົງແລ້ວ ເຂົາກໍຮູ້ວ່າພຣະອົງຊົງກ່າວເຖິງພວກເຂົາ.
[46]ຂະນະກຳລັງພະຍາຍາມຈັບພຣະອົງນັ້ນ ພວກເຂົາຢ້ານປະຊາຊົນ ເພາະປະຊາຊົນຖືວ່າພຣະອົງເປັນຜູ້ປະກາດພຣະທັມຜູ້ຫນຶ່ງ.

 generated on Tue Jun 17 19:01:42 2025

22 [1]ພຣະເຢຊູເຈົ້າໄດ້ກ່າວກັບພວກເຂົາອີກເທື່ອຫນຶ່ງວ່າ,[2]ຣາຊະອານາຈັກສະຫວັນ ປຽບເຫມືອນ ກະສັດຜູ້ຫນຶ່ງຕຽມງານກິນລ້ຽງ
ເນື່ອງໃນພິທີສົມຣົດລູກຊາຍຂອງຕົນ.[3]ພຣະອົງຊົງສົ່ງຄົນໃຊ້ໄປເອີ້ນຜູ້ທີ່ຖືກເຊີນໃນງານນີ້ ແຕ່ເຂົາບໍ່ຢາກມາ.

[4]ແລ້ວກະສັດຈຶ່ງຊົງໃຊ້ຂ້າໃຊ້ໄປຕື່ມອີກຄົນຫນຶ່ງ ພຣະອົງສັ່ງເຂົາວ່າ 'ຈົ່ງບອກພວກທີ່ຖືກເຊີນນັ້ນວ່າ, "ເບິ່ງແມ,
ເຮົາໄດ້ຈັດຕຽມອາຫານແລງໄວ້ແລ້ວ ງົວແລະສັດອ້ວນພີກໍໄດ້ຂ້າໄວ້ແລ້ວ ແລະສິ່ງສາຣະພັດກໍຕຽມໄວ້ພ້ອມແລ້ວ.
ເຊີນມາຮ່ວມງານລ້ຽງພິທີສົມຣົດນັ້ນເຖີ້ນ"
[5]ແຕ່ເຂົາກໍເພີກເສີຍບໍ່ສົນໃຈໃນຄໍາເຊື້ອເຊີນແລະພວກເຂົາກໍຫນີໄປເສັຽ, ບາງຄົນກໍໄປໄຮ່ໄປນາ ແລະ ບາງຄົນໄປຄ້າຂາຍ.
[6]ສ່ວນພວກອື່ນນັ້ນກໍຈັບພວກຂ້າໃຊ້ເຮັດການຫຍາບຊ້າແລ້ວຂ້າເຂົາເສັຽ.[7]ພຣະອົງຈຶ່ງຊົງຮັບສັ່ງໃຫ້ກອງທະຫານໄປປະຫານຊີວິດຄາດຕະ-
ກອນເຫລົ່ານັ້ນ ແລະໃຫ້ເຜົາບ້ານເຮືອນຂອງເຂົາເສັຽ.
[8]ຈາກນັ້ນ ພຣະອົງຈຶ່ງຊົງຮັບສັ່ງຂ້າໃຊ້ວ່າ, 'ງານສົມຣົດກໍພ້ອມຢູ່ແລ້ວ ແຕ່ຜູ້ຖືກເຊີນນັ້ນບໍ່ສົມກັບງານ.
[9]ພົບຄົນໃດກໍໃຫ້ເຊີນມາໃນງານລ້ຽງສົມຣົດນີ້.'[10]ພວກຂ້າໃຊ້ນັ້ນຈຶ່ງອອກໄປຕາມຖະຫນົນຫົນທາງ
ພາຄົນທັງປວງທັງດີແລະຊົ່ວທີ່ເຂົາໄດ້ພົບໃຫ້ເຂົ້າມາໃນງານສົມຣົດນີ້ ຈົນຫ້ອງພິທີສົມຣົດເຕັມດ້ວຍແຂກ.
[11]ແຕ່ເມື່ອກະສັດອົງນັ້ນສະເດັດເຂົ້າມາທອດພຣະເນດແຂກທັງຫລາຍ, ກໍຊົງເຫັນຜູ້ຫນຶ່ງຢູ່ທີ່ນັ້ນບໍ່ໄດ້ນຸ່ງເຄື່ອງສໍາລັບງານ.
[12]ກະສັດຈຶ່ງຊົງຖາມຜູ້ນັ້ນວ່າ 'ສະຫາຍເອີຍ, ເຫດໃດທ່ານເຂົ້າມາທີ່ນີ້ໂດຍບໍ່ນຸ່ງເຄື່ອງສໍາລັບງານສົມຣົດ?' ສ່ວນຄົນນັ້ນກໍມິດຢູ່ປາກບໍ່ອອກ.
[13]ແລ້ວກະສັດຈຶ່ງຊົງສັ່ງແກ່ພວກຂ້າໃຊ້ວ່າ 'ຈົ່ງມັດຕີນມັດມືຄົນນີ້ເອົາໄປຖິ້ມເສັຽບ່ອນມືດພາຍນອກ' ທີ່ນັ້ນມີການຮ້ອງໄຫ້ແລະຂົບແຂ້ວຢູ່.
[14]ດ້ວຍວ່າຜູ້ຮັບເຊີນກໍມີຫລາຍ ແຕ່ຜູ້ທີ່ຊົງເລືອກໄວ້ກໍມີຫນ້ອຍ."
[15]ຫລັງຈາກນັ້ນພວກຟາຣີຊາຍໄປປຶກສາກັນແລະໄດ້ວາງແຜນເພື່ອຈະຈັບຜິດໃນຖ້ອຍຄໍາຂອງພຣະອົງໃຫ້ໄດ້ຢ່າງໃດ.
[16]ຈາກນັ້ນພວກເຂົາຈຶ່ງໃຊ້ພວກສິດຂອງຕົນກັບພວກເຮໂຣດໄປທູນພຣະເຢຊູເຈົ້າວ່າ, "ອາຈານເອີຍ, ພວກຂ້າພຣະເຈົ້າຊາບຢູ່ວ່າທ່ານເປັນຜູ້ສັດ-
ຊື່, ໄດ້ສັ່ງສອນໃນທາງຂອງພຣະເຈົ້າຢ່າງສັດຊື່. ທ່ານບໍ່ໄດ້ເອົາໃຈຜູ້ໃດ ແລະທ່ານບໍ່ໄດ້ເຂົ້າຂ້າງຝ່າຍໃດຝ່າຍຫນຶ່ງ.[17]ຂໍໂຜດໃຫ້ພວກຂ້າພຣະ-
ເຈົ້າຊາບແດ່ວ່າ ທ່ານຄຶດເຫັນຢ່າງໃດ? ການທີ່ເສັຽສ່ວຍໃຫ້ແກ່ກາຍຊານັ້ນສົມຄວນ ຫລືບໍ່?"
[18]ແຕ່ພຣະເຢຊູຊົງຊາບແຜນການຮ້າຍຂອງພວກເຂົາ ຈຶ່ງຊົງກ່າວວ່າ, "ໂອຄົນຫນ້າຊື່ໃຈຄົດເອີຍ, ເຈົ້າຈະມາທົດລອງເຮົາເຮັດຫຍັງ?
[19]ຈົ່ງເອົາເງິນຫລຽນທີ່ໃຊ້ເສັຽພາສີນັ້ນ ມາໃຫ້ເຮົາເບິ່ງດູ." ຈາກນັ້ນເຂົາຈຶ່ງເອົາເງິນຫນຶ່ງເດນາລິອົນມາໃຫ້ພຣະອົງ.
[20]ພຣະເຢຊູເຈົ້າຈຶ່ງຊົງຖາມເຂົາວ່າ, "ຮູບແລະຄໍາຈາຣຶກນີ້ເປັນຂອງໃຜ?"[21]"ເປັນຂອງກາຍຊາ." ແລ້ວພຣະເຢຊູເຈົ້າຈຶ່ງຊົງກ່າວກັບພວກເຂົາວ່າ,
"ເຫດສັນນັ້ນສິ່ງທີ່ເປັນຂອງກາຍຊາ ຈົ່ງຄືນຖວາຍແກ່ກາຍຊາ ແລະສິ່ງທີ່ເປັນຂອງພຣະເຈົ້າ ຈົ່ງຄືນຖວາຍແກ່ພຣະ-
ເຈົ້າ."[22]ເມື່ອພວກເຂົາໄດ້ຍິນເຊັ່ນນັ້ນພວກເຂົາຈຶ່ງພາກັນຫນີຈາກພຣະອົງໄປ.
[23]ໃນວັນດຽວກັນນັ້ນໄດ້ມີພວກຊາດູກາຍມາຫາພຣະອົງ, ພວກນີ້ເຄີຍເວົ້າວ່າ, ບໍ່ມີການຄືນມາຈາກຕາຍ. ເຂົາທູນຖາມພຣະອົງ[24]ກ່າວວ່າ, "ອາ-
ຈານເອີຍ, ໂມເຊໄດ້ສັ່ງໄວ້ວ່າ, 'ຖ້າຜູ້ໃດຕາຍ, ໃນເມື່ອຍັງບໍ່ມີລູກ, ກໍໃຫ້ນ້ອງຊາຍຂອງຜູ້ນັ້ນເອົາເອື້ອຍໄພ້ໄວ້ເປັນພັນຣະຍາ ເພື່ອສືບເຊື້ອ-
ສາຍອ້າຍຂອງຕົນ.'
[25]ໃນພວກເຂົາມີພີ່ນ້ອງຜູ້ຊາຍນໍາກັນທັງຫມົດເຈັດຄົນ. ອ້າຍກົກເອົາເມັຽແລ້ວໄດ້ຕາຍໄປເມື່ອຍັງບໍ່ມີລູກ ກໍປະເມັຽໄວ້ໃຫ້ແກ່ນ້ອງຊາຍ.
[26]ຈົນເຖິງຜູ້ຖ້ວນເຈັດ.[27]ພາຍຫລັງເຂົາທັງເຈັດ ຍິງນັ້ນກໍຕາຍ.[28]ຍິງນັ້ນຈະເປັນເມັຽຂອງຜູ້ໃດໃນເຈັດຄົນນັ້ນ?
ເພາະວ່ານາງໄດ້ເປັນເມັຽຂອງຊາຍທັງເຈັດຄົນແລ້ວ."
[29]ແຕ່ພຣະເຢຊູເຈົ້າຊົງຕອບເຂົາວ່າ, "ພວກທ່ານຫລົງຜິດແລ້ວ ເພາະທ່ານບໍ່ຮູ້ຈັກພຣະຄັມພີຫລືຣິດເດດຂອງພຣະເຈົ້າ.
[30]ເພາະເມື່ອມະນຸດເປັນຄືນມາຈາກຄວາມຕາຍນັ້ນ ຈະບໍ່ມີການແຕ່ງງານ ຫລືຍົກໃຫ້ເປັນຜົວເມັຽກັນອີກ. ແຕ່ເຂົາຈະເປັນເຫມືອນເທ-
ວະດາໃນສະຫວັນ.
[31]ທ່ານທັງຫລາຍຍັງບໍ່ໄດ້ອ່ານຫລືຊຶ່ງພຣະເຈົ້າໄດ້ຊົງກ່າວໄວ້ກັບພວກທ່ານວ່າ,[32]'ຝ່າຍເຮົາເປັນພຣະເຈົ້າຂອງອັບຣາຮາມ, ພຣະ-
ເຈົ້າຂອງຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ?' ພຣະອົງບໍ່ໄດ້ຊົງເປັນພຣະເຈົ້າຂອງຄົນຕາຍ ແຕ່ຊົງເປັນພຣະ-
ເຈົ້າຂອງຄົນເປັນ."[33]ເມື່ອຄົນທັງປວງໄດ້ຍິນດັ່ງນີ້ແລ້ວ ກໍພາກັນປະຫລາດໃຈດ້ວຍຄໍາສັ່ງສອນຂອງພຣະອົງ.
[34]ແຕ່ເມື່ອພວກຟາຣີຊາຍ ເມື່ອໄດ້ຍິນວ່າພຣະອົງຊົງເຮັດໃຫ້ພວກຊາດູກາຍມິດຢູ່ ພວກເຂົາຈຶ່ງປະຊຸມກັນ,
[35]ມີນັກກົດຫມາຍຜູ້ຫນຶ່ງໃນພວກເຂົາໄດ້ທົດລອງ ໂດຍທູນຖາມພຣະອົງວ່າ,[36]"ທ່ານອາຈານເອີຍ, ໃນພຣະບັນຍັດຂໍ້ໃດເປັນຂໍ້ໃຫຍ່ທີ່ສຸດ?"
[37]ພຣະເຢຊູເຈົ້າຕອບພວກເຂົາວ່າ, "ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ, ດ້ວຍສຸດຈິດ,
ແລະດ້ວຍສຸດຄວາມຄຶດຂອງເຈົ້າ.'[38]ນັ້ນແລະຄືກົດບັນຍັດຂໍ້ໃຫຍ່ແລະຂໍ້ຕົ້ນ.
[39]ແລະພຣະບັນຍັດຂໍ້ທີສອງກໍເຫມືອນກັນຄື 'ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ.'[40]ກົດບັນຍັດທັງຫມົດກໍຂຶ້ນຢູ່ກັບພຣະບັນຍັດສອງຂໍ້ນີ້."
[41]ພຣະເຢຊູເຈົ້າຊົງຖາມເຂົາວ່າ,[42]"ພວກທ່ານຄຶດເຫັນຢ່າງໃດດ້ວຍເລື່ອງພຣະຄຣິດ ເພິ່ນເປັນເຊື້ອສາຍຂອງຜູ້ໃດ?" ພວກເຂົາທູນຕອບວ່າ,
"ເປັນເຊື້ອສາຍຂອງດາວິດ."
[43]ພຣະເຢຊູຈຶ່ງຊົງຖາມພວກເຂົາວ່າ, "ຖ້າຢ່າງນັ້ນ ເຫດໃດດາວິດຈຶ່ງຊົງເອີ້ນພຣະອົງວ່າອົງພຣະຜູ້ເປັນເຈົ້າ ໂດຍເດດພຣະວິນຍານ
ແລະຊົງກ່າວວ່າ,[44]"ຈົ່ງນັ່ງເບື້ອງຂວາມືຂອງເຮົາ ຈົນກວ່າເຮົາຈະປາບສັດຕຣູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ?"
[45]ຖ້າດາວິດເອີ້ນພຣະຄຣິດວ່າ 'ອົງພຣະຜູ້ເປັນເຈົ້າ' ແລ້ວພຣະອົງຈະເປັນເຊື້ອສາຍຂອງດາວິດໄດ້ຢ່າງ-
ໃດ?"[46]ບໍ່ມີຜູ້ໃດໃນພວກເຂົາສາມາດຕອບພຣະອົງໄດ້ ຕັ້ງແຕ່ວັນນັ້ນມາບໍ່ມີຜູ້ໃດກ້າຖາມພຣະອົງອີກ.

 generated on Tue Jun 17 19:01:42 2025

23 [1]ຫລັງຈາກນັ້ນພຣະເຢຊູເຈົ້າຊົງກ່າວກັບປະຊາຊົນແລະບັນດາສາວົກຂອງພຣະອົງວ່າ[2]“ພວກນັກທັມແລະພວກຟາ-
ຣີຊາຍນັ່ງບ່ອນນັ່ງຂອງໂມເຊ.[3]ເຫດສັນນັ້ນ ທຸກສິ່ງທີ່ເຂົາບອກສອນພວກທ່ານ ຈົ່ງເຮັດຕາມ. ແຕ່ຢ່າໄດ້ເຮັດຕາມກິດຈະການຂອງເຂົາ,
ເພາະພວກເຂົາບອກສອນສິ່ງຕ່າງໆເຫລົ່ານີ້ໄວ້ ແຕ່ບໍ່ໄດ້ເຮັດຕາມ.

[4]ດ້ວຍວ່າພວກເຂົາເອົາພາຣະຫນັກມາວາງໃສ່ບ່າມະນຸດ ສ່ວນເຂົາເອງ ແມ່ນແຕ່ນິ້ວມືດຽວກໍບໍ່ຍອມຈັບຍົກໄປ.[5]ພວກເຂົາບັນຈຸຂໍ້ພຣະທັມປະ-
ຈໍາຕົວ ເຂົາກໍເຮັດໃຫ້ໃຫຍ່ ແລະຍອຍເສື້ອຂອງເຂົາ ກໍໃຫ້ຍາວອອກໄປ.
[6]ພວກເຂົາມັກບ່ອນນັ່ງອັນມີກຽດໃນງານລ້ຽງຕ່າງໆແລະໃນໂຮງທັມະເທສະຫນາ,[7]ແລະມັກໃຫ້ມະນຸດເອີ້ນເຂົາວ່າ ‘ອາຈານ’
[8]ແຕ່ຝ່າຍພວກທ່ານ ຢ່າໃຫ້ໃຜເອີ້ນວ່າ ‘ອາຈານເຈົ້າຂ້າ’ ເພາະວ່າພວກທ່ານມີແຕ່ພຣະອາຈານຜູ້ດຽວ ແລະພວກທ່ານເປັນພີ່ນ້ອງກັນທັງຫມົດ.
[9]ແລະຢ່າເອີ້ນຜູ້ໃດໃນໂລກວ່າ ‘ບິດາ’ ເພາະພວກທ່ານມີພຣະບິດາແຕ່ພຽງຜູ້ດຽວ ຄືຜູ້ທີ່ຊົງສະຖິດຢູ່ໃນສະຫວັນ.
[10]ຢ່າໃຫ້ຜູ້ໃດເອີ້ນພວກທ່ານວ່າ‘ນາຍ’ ເພາະວ່ານາຍຂອງພວກທ່ານມີແຕ່ຜູ້ດຽວ ຄືພຣະຄຣິດເຈົ້າ.
[11]ເພາະວ່າຜູ້ໃດທີ່ເປັນໃຫຍ່ທີ່ສຸດໃນພວກທ່ານ ຜູ້ນັ້ນຕ້ອງຮັບໃຊ້ຄົນອື່ນ.[12]ຜູ້ນັ້ນຈະຖືກເຮັດໃຫ້ຕໍ່າລົງ ຜູ້ໃດຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ.
[13]ແຕ່ວິບັດແກ່ພວກທັມະຈານແລະພວກຟາຣີຊາຍ ຄົນຫນ້າຊື່ໃຈຄົດເອີຍ! ດ້ວຍວ່າພວກເຈົ້າອັດປະຕູຣາຊະອານາຈັກສະຫວັນຕັນທາງມະນຸດ.
ເພາະວ່າພວກເຈົ້າເອງກໍບໍ່ເຂົ້າໄປ ແລະເມື່ອຄົນອື່ນຈະເຂົ້າໄປ ພວກເຈົ້າກໍບໍ່ໃຫ້ເຂົ້າໄປ.
[14]ວິບັດແກ່ເຈົ້າພວກທັມະຈານແລະພວກຟາຣີຊາຍພວກເຈົ້າສໍ້ໂກງເອົາສິ່ງຂອງໆບັນດາແມ່ຫມ້າຍແລະແກ້ງອະທິຖານຍືດຍາວ[15]ແລະ ພວກຟາ-
ຣີຊາຍ ຄົນຫນ້າຊື່ໃຈຄົດເອີຍ ດ້ວຍວ່າພວກເຈົ້າທຽວໄປທາງນໍ້າແລະທາງບົກທົ່ວໄປ ເພື່ອຈະໃຫ້ແມ່ນແຕ່ຄົນດຽວເຂົ້າສາສນາ
ແຕ່ເມື່ອໄດ້ເຂົ້າແລ້ວ ພວກເຈົ້າກໍເຮັດໃຫ້ຄົນນັ້ນສົມກັບນະຣົກຫລາຍກວ່າເຈົ້າເອງເຖິງສອງທໍ່.
[16]ວິບັດແກ່ເຈົ້າ, ຄົນນໍາທາງຕາບອດທີ່ສອນວ່າ ‘ຖ້າຜູ້ໃດຈະສາບານອ້າງໃສ່ພຣະວິຫານ ຄໍາສາບານນັ້ນກໍບໍ່ມີຂໍ້ຜູກມັດ ແຕ່ຖ້າຜູ້ໃດສາ-
ບານອ້າງໃສ່ທອງຄໍາຂອງພຣະວິຫານ ຜູ້ນັ້ນຈະຕ້ອງເຮັດຕາມຄໍາທີ່ຕົນໄດ້ສາບານ.’[17]ໂອ ຄົນຕາບອດ ແລະ ໂງ່ເອີຍ, ສິ່ງໃດຈະສໍາ-
ຄັນກວ່າກັນທອງຄໍາ ຫລືພຣະວິຫານ ທີ່ເຮັດໃຫ້ທອງຄໍານັ້ນສັກສິດ?
[18]ແລະສອນວ່າ ‘ຖ້າຜູ້ໃດຈະສາບານອ້າງໃສ່ແທນບູຊາ ຄໍາສາບານນັ້ນກໍບໍ່ມີຂໍ້ຜູກມັດ ແຕ່ຖ້າຜູ້ໃດຈະສາບານໃສ່ເຄື່ອງຖວາຍເທິງແທ່ນບູຊາ
ຜູ້ນັ້ນຈະຕ້ອງເຮັດຕາມຄໍາທີ່ຕົນໄດ້ສາບານ.’[19]ສິ່ງໃດຈະສໍາຄັນກວ່າກັນ ເຄື່ອງຖວາຍຫລືແທ່ນບູຊາທີ່ເຮັດໃຫ້ເຄື່ອງຖວາຍນັ້ນສັກສິດ?
[20]ເຫດສະນັ້ນ, ຜູ້ໃດຈະສາບານອ້າງໃສ່ແທ່ນບູຊາ ແລະ ໃສ່ເຄື່ອງຖວາຍທັງປວງທີ່ຢູ່ເທິງແທ່ນນັ້ນເຫມືອນກັນ.[21]ຜູ້ໃດຈະສາບານອ້າງໃສ່ພຣະວິ-
ຫານ ກໍອ້າງໃສ່ພຣະອົງຜູ້ຊົງສະຖິດຢູ່ໃນພຣະວິຫານນັ້ນເຫມືອນກັນ.[22]ແລະ ຜູ້ໃດຈະສາບານອ້າງໃສ່ສະຫວັນ ກໍອ້າງໃສ່ພຣະທີ່-
ນັ່ງແລະອ້າງໃສ່ພຣະອົງຜູ້ປະທັບເທິງພຣະທີ່ນັ່ງນັ້ນເຫມືອນກັນ.
[23]ວິບັດແກ່ເຈົ້າພວກນັກທັມແລະພວກຟາຣີຊາຍ ຄົນຫນ້າຊື່ໃຈຄົດເອີຍ. ດ້ວຍວ່າພວກເຈົ້າຖວາຍສິບລົດທີ່ເປັນຜັກກ້ານກໍາ, ຜັກຊີ,
ແຕ່ພວກເຈົ້າຕັດຂໍ້ສໍາຄັນຂອງພຣະບັນຍັດ ຄືຄວາມຍຸຕິທັມ, ຄວາມເມດຕາ, ຄວາມສັດຊື່ນັ້ນໄດ້ປະຖິ້ມເສັຽ ເຊິ່ງສິ່ງເຫລົ່ານີ້ແຫລະ,
ທີ່ພວກເຈົ້າຄວນໄດ້ປະຕິບັດຢູ່ໂດຍບໍ່ຕ້ອງປະຖິ້ມສິ່ງອື່ນນັ້ນ.[24]ໂອ ພວກຄົນນໍາທາງຕາບອດເອີຍ, ເຈົ້າຕອງແມງມືອອກແຕ່ກືນໂຕອູດທັງໂຕເຂົ້າໄປ.
[25]ວິບັດແກ່ເຈົ້າພວກນັກທັມແລະພວກຟາຣີຊາຍ ຄົນຫນ້າຊື່ໃຈຄົດເອີຍ. ເຫດວ່າພວກເຈົ້າເຄີຍລ້າງຖ້ວຍຊາມໃຫ້ສະອາດແຕ່ຂ້າງນອກ
ແຕ່ຂ້າງໃນຖ້ວຍຊາມນັ້ນເຕັມໄປດ້ວຍການຂູ່ຊິງເອົາແລະການມົວເມົາກິເລດ.[26]ໂອຟາຣີຊາຍຕາບອດເອີຍ, ຈົ່ງຊໍາຣະຖ້ວຍ-
ຊາມຂ້າງໃນເສັຽກ່ອນ, ເພື່ອຂ້າງນອກຈະສະອາດເຫມືອນກັນ.
[27]ວິບັດແກ່ເຈົ້າພວກນັກທັມແລະພວກຟາຣີຊາຍ ຄົດຫນ້າຊື່ໃຈຄົດເອີຍ. ດ້ວຍວ່າພວກເຈົ້າເປັນເຫມືອນອຸບໂມງຝັງສົບ
ທາດ້ວຍປູນຂາວຂ້າງນອກເບິ່ງງົດງາມ ແຕ່ຂ້າງໃນເຕັມໄປດ້ວຍກະດູກຄົນຕາຍ ແລະ ສາຣະພັດທີ່ຫນ້າຂີ້ດຽດ.[28]ພາຍນອກປະກົດຕໍ່ມະ-
ນຸດວ່າເປັນຄົນສິນທັມ, ແຕ່ພາຍໃນເຕັມໄປດ້ວຍການຫນ້າຊື່ໃຈຄົດ ແລະ ຄວາມຊົ່ວຊ້າ.
[29]ວິບັດແກ່ເຈົ້າ ພວກນັກທັມແລະພວກຟາຣີຊາຍ ຄົນຫນ້າຊື່ໃຈຄົດເອີຍ. ດ້ວຍວ່າພວກເຈົ້າສ້າງອຸບໂມງຝັງສົບຂອງພວກປະກາດພຣະ-
ທັມແລະຕົບແຕ່ງທາດຂອງພວກຄົນສິນທັມໃຫ້ງົດງາມ.[30]ເຈົ້າກ່າວວ່າ
‘ຖ້າພວກເຮົາໄດ້ຢູ່ໃນສະໄຫມບັນພະບຸຣຸດຂອງເຮົານັ້ນກໍຈະບໍ່ມີສ່ວນກັບເຂົາໃນການຂ້າ ພວກຜູ້ປະກາດພຣະທັມນັ້ນ.
[31]ດັ່ງນັ້ນພວກເຈົ້າຈຶ່ງເປັນພະຍານຕໍ່ສູ້ຕົນເອງວ່າເປັນລູກຂອງຜູ້ທີ່ໄດ້ຂ້າພວກຜູ້ປະກາດພຣະທັມເຫລົ່ານັ້ນ.
[32]ເຈົ້າທັງຫລາຍຈົ່ງເຮັດຕາມທີ່ບັນພະບຸຣຸດໄດ້ເຮັດນັ້ນໃຫ້ຄົບຖ້ວນສາ.[33]ເຈົ້າພວກງູ ພວກຊາດງູຮ້າຍເອີຍ, ພວກເຈົ້າຈະຫນີພົ້ນໂທດນະ-
ຣົກໄດ້ຢ່າງໃດ?
[34]ເຫດສັນນັ້ນ, ເບິ່ງເຖີດ, ເຮົາໃຊ້ຜູ້ປະກາດພຣະທັມ ແລະ ນັກປຣາດ, ແລະ ນັກທັມຕ່າງໆມາຫາພວກເຈົ້າ. ເຈົ້າກໍຈະຂ້າບາງຄົນເສັຽແດ່ ແລະ
ພວກເຈົ້າໄດ້ຂ້ຽນຕີພວກເຂົາໃນໂຮງທັມະເທສະຫນາ ແລະ ຂົ່ມເຫັງໄລ່ເຂົາອອກຈາກເມືອງນີ້ໄປເມືອງນັ້ນແດ່.
[35]ເລືອດອັນບໍ່ມີຜິດທັງຫມົດທີ່ຕົກໃສ່ແຜ່ນດິນ ຕັ້ງແຕ່ເລືອດຂອງອາເບັນຜູ້ບໍ່ມີຜິດຈົນເຖິງເລືອດຂອງຊາຂາລີຢາລູກຊາຍຂອງບາຣາຂີຢາ
ທີ່ພວກເຈົ້າໄດ້ຂ້າໃນລະຫວ່າງພຣະວິຫານແລະແທ່ນບູຊາ.[36]ເຮົາບອກພວກເຈົ້າຄວາມຈິງວ່າ ເຫດເຫລົ່ານີ້ຈະຕົກໃສ່ຄົນສະໄຫມນີ້.”
[37]ໂອ ເຢຣູຊາເລັມ ເຢຣູຊາເລັມເອີຍ, ເມືອງທີ່ໄດ້ຂ້າບັນດາຜູ້ປະກາດພຣະທັມແລະເອົາຫີນຄວ່າງໃສ່ພວກທີ່ຮັບໃຊ້ມາຫາເຈົ້າ. ເຮົາປາ-
ຖນາຈັກເທື່ອແລ້ວຫນໍ ວ່າຈະຮວບຮວມເອົາລູກຂອງເຈົ້າໄວ້ ເຫມືອນແມ່ໄກ່ຮວບຮວມລູກໄວ້ໃຕ້ປີກຂອງມັນ, ແຕ່ພວກເຈົ້າບໍ່ຍິນຍອມ.[38]ເບິ່ງແມ,
ບ້ານເຮືອນຂອງເຈົ້າກໍຈະຖືກປະຮ້າງໄວ້ໃຫ້ຢູ່ວ່າງເປົ່າແກ່ເຈົ້າ.[39]ດັ່ງນັ້ນເຮົາຈຶ່ງກ່າວກັບພວກເຈົ້າວ່າ ຕັ້ງແຕ່ນີ້ຕໍ່ໄປພວກເຈົ້າຈະບໍ່ເຫັນເຮົາອີກ
ຈົນກວ່າພວກເຈົ້າຈະອອກປາກກ່າວວ່າ ‘ສັນຣະເສີນແດ່ພຣະເຈົ້າຜູ້ເຊິ່ງສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ.”


generated on Tue Jun 17 19:01:42 2025

24 1ພຣະເຢຊູເຈົ້າສະເດັດອອກຈາກບໍລິເວນພຣະວິຫານ ແລະ ເມື່ອກຳລັງສະເດັດໄປນັ້ນ. ພວກສາວົກຂອງພຣະອົງໄດ້ມາຫາພຣະອົງ
ແລະຊີ້ໄປທີ່ຕຶກໃນບໍລິເວນພຣະວິຫານ. 2ແຕ່ພຣະອົງຈຶ່ງຊົງຕອບວ່າ, “ພວກທ່ານເຫັນສິ່ງທັງປວງເຫລົ່ານີ້ແລ້ວບໍ່ແມ່ນບໍ?
ເຮົາບອກພວກທ່ານຕາມຄວາມຈິງວ່າ ກ້ອນຫີນທີ່ຊ້ອນທັບກັນຢູ່ທີ່ນີ້ ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນ.”

3ຂະນະທີ່ພຣະອົງປຣະທັບຢູ່ພູຫມາກກອກເທດ ພວກສາວົກມາເຝົ້າພຣະອົງຕ່າງຫາກກາບທູນວ່າ, “ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າ ເຫດ-
ການເຫລົ່ານີ້ຈະເກີດຂຶ້ນໃນເວລາໃດ ສິ່ງໃດເປັນຫມາຍສຳຄັນແຫ່ງການສະເດັດມາຂອງພຣະອົງແລະສະໄຫມເກົ່າຈະສິ້ນສຸດລົງ.” 4ພຣະ-
ເຢຊູເຈົ້າຊົງຕອບວ່າ, “ຈົ່ງຣະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ. 5ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ
‘ເຮົານີ້ແຫລະ, ເປັນພຣະຄຣິດ’ ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ.
6ພວກທ່ານຈະໄດ້ຍິນເຖິງເລື່ອງການເສິກ ແລະ ຂ່າວເລົ່າລືເລື່ອງສົງຄາມ ເມື່ອເຖິງເວລານັ້ນທ່ານຢ່າຕົກໃຈ ດ້ວຍວ່າເຫດການເຫລົ່ານີ້ຈຳ-
ເປັນຕ້ອງເກີດຂຶ້ນ; ແຕ່ວ່າທີ່ສຸດປາຍຍັງບໍ່ມາເຖິງ. 7ດ້ວຍວ່າປະເທດຕໍ່ປະເທດແລະອານາຈັກຕໍ່ອານາຈັກຈະສູ້ຮົບກັນ
ທັງຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າງໆ.
8ແຕ່ເຫດການທັງປວງນີ້ເປັນເຫມືອນຂັ້ນຕົ້ນຂອງຄວາມເຈັບປວດໃນການເກີດລູກເທົ່ານັ້ນ.
9ຈາກນັ້ນພວກເຂົາຈະມອບພວກທ່ານໄວ້ໃຫ້ທົນທຸກລຳບາກແລະຈະຂ້າທ່ານເສັຽ. ຄົນທຸກຊາດຈະກຽດຊັງພວກທ່ານເພາະເຫັນ-
ແກ່ນາມຂອງເຮົາ. 10ແລະຫັກຫລັງກັນແລະກັນ, ລວມທັງຈະກຽດຊັງເຊິ່ງກັນແລະກັນ. 11ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ.
12ເພາະວ່າຄວາມຮັກຂອງຄົນສ່ວນຫລາຍຈະເຢັນລົງ ເພາະຄວາມອະທັມຈະແຜ່ກວ້າງອອກໄປ.
13ແຕ່ຜູ້ໃດອົດທົນໄດ້ຈົນເຖິງທີ່ສຸດຜູ້ນັ້ນຈະໄດ້ລອດພົ້ນ. 14ຂ່າວປະເສີດຂອງຣາຊະອານາຈັກນີ້ຈະໄດ້ປະກາດໄປທົ່ວໂລກໃຫ້ເປັນຄຳພະ-
ຍານແກ່ທຸກຊາດ. ແລ້ວທີ່ສຸດປາຍຈະມາເຖິງ.”
15ເຫດສັນນັ້ນ, ເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ຫນ້າກຽດຫນ້າຊັງ, ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນສະຖານທີ່ສັກສິດ ຕາມພຣະ-
ທັມທີ່ຊົງໄດ້ກ່າວໄວ້ດ້ວຍດານີເອນຜູ້ປະກາດພຣະທັມນັ້ນ (ໃຫ້ຜູ້ອ່ານເຂົ້າໃຈເອງເຖີດ), 16ແລະ
ຜູ້ທີ່ຢູ່ໃນແຂວງຢູດາຍໃຫ້ປົບຫນີສູ່ພູເຂົາທັງຫລາຍໄປ 17ຜູ້ທີ່ຢູ່ເທິງຫລັງຄາເຮືອນ ຢ່າໃຫ້ລົງມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ.
18ສ່ວນຜູ້ທີ່ຢູ່ຕາມທົ່ງນາກໍຢ່າຕ່າວຄືນມາເອົາເສື້ອຜ້າຂອງຕົນ.
19ແຕ່ໃນວັນເຫລົ່ານັ້ນເປັນຫນ້າເວດທະນາເຕັມທີ່ຕໍ່ຜູ້ຍິງທີ່ມີລູກນ້ອຍແລະຍັງໃຫ້ລູກອ່ອນກິນນົມຢູ່.
20ຈົ່ງພາວັນນາອະທິຖານຂໍຕໍ່ພຣະເຈົ້າເພື່ອການທີ່ພວກເຈົ້າປົບຫນີໄປນັ້ນຈະບໍ່ຖືກໃນຣະດູຫນາວ 21ຕັ້ງແຕ່ຕົ້ນເດີມໂລກ ຈົນເຖິງບັດນີ້,
ຄວາມທຸກອັນຮ້າຍແຮງຢ່າງນີ້ຈະບໍ່ມີຕໍ່ໄປອີກຈັກເທື່ອ. 22ກໍຈະບໍ່ມີມະນຸດຄົນໃດລອດພົ້ນໄດ້. ແຕ່ເພາະເຫັນ-
ແກ່ພວກທີ່ຊົງເລືອກໄວ້ນັ້ນ, ວັນເຫລົ່ານັ້ນຈຶ່ງໄດ້ຊົງບັນດານໃຫ້ສັ້ນເຂົ້າ.
23ແລະຖ້າຜູ້ໃດຈະບອກພວກທ່ານວ່າ ‘ເບິ່ງແມ, ອົງພຣະຄຣິດຢູ່ທີ່ນີ້’ ຫລື ‘ຢູ່ທີ່ນັ້ນ’ ຢ່າຊູ່ເຊື່ອເຂົາ. 24ແລະສະແດງຫມາຍສຳຄັນອັນໃຫຍ່
ແລະການອັດສະຈັນຕ່າງໆ, ຖ້າເປັນໄດ້ ມັນຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງໄປ. 25ເບິ່ງແມ,
ເຮົາໄດ້ບອກພວກທ່ານໃຫ້ຮູ້ໄວ້ກ່ອນທີ່ເວລານັ້ນຈະມາເຖິງ.
26ເຫດສະນັ້ນ, ຖ້າພວກເຂົາບອກພວກທ່ານວ່າ ‘ເບິ່ງແມ, ພຣະອົງຊົງປຣະທັບຢູ່ໃນປ່າ’, ຢ່າໄດ້ອອກໄປໃນປ່ານັ້ນ. ຫລື, 'ເບິ່ງແມ,
ພຣະອົງປຣະທັບຢູ່ໃນຫ້ອງ’, ກໍຢ່າຊູ່ເຊື່ອພວກເຂົາເລີຍ. 27ເພາະວ່າແສງໄຟໄດ້ສ່ອງອອກຈາກທິດຕາເວັນອອກ ແລະ
ສ່ອງໄປເຖິງທິດຕາເວັນຕົກຢ່າງໃດ, ການທີ່ບຸດມະນຸດຈະສະເດັດມາກໍຈະເປັນດັ່ງນັ້ນ. 28ເມື່ອຊາກສົບຢູ່ບ່ອນໃດ ຝູງແຮ້ງກໍຈະຕອມບ່ອນນັ້ນ.”
29ແຕ່ພໍຫມົດຄວາມທຸກລຳບາກຂອງວັນເຫລົ່ານັ້ນໄດ້ຜ່ານພົ້ນໄປແລ້ວ, ດວງອາທິດຈະມືດດັບໄປ, ດວງຈັນຈະບໍ່ສ່ອງແສງ,
ດວງດາວທັງປວງຈະຕົກລົງຈາກຟ້າ, ແລະ ບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະສະທ້ານຫວັ່ນໄຫວ.
30ຕໍ່ຈາກນັ້ນຫມາຍສຳຄັນຂອງບຸດມະນຸດຈະປະກົດຂຶ້ນໃນທ້ອງຟ້າ, ແລະ ມະນຸດທຸກຊາດທົ່ວໂລກຈະຮ້ອງໄຫ້ໂສກເສົ້າ.
ພວກເຂົາຈະເຫັນບຸດມະນຸດກຳລັງສະເດັດມາເທິງເມກໃນທ້ອງຟ້າ ພ້ອມດ້ວຍຣິດທານຸພາບ ແລະ ສະຫງ່າຣາສີອັນຍິ່ງໃຫຍ່.
31ພຣະອົງຈະສົ່ງທູດສະຫວັນຂອງພຣະອົງດ້ວຍສຽງແກ, ແລະ ພວກເຂົາຈະຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວ
ຈາກທິດທັງສີ່ທິດ ແລະ ຈາກທີ່ສຸດຂອງປາຍຟ້າເບື້ອງນີ້ ຈົນເຖິງທີ່ສຸດຟ້າເບື້ອງນັ້ນ.
32ຮຽນຮູ້ບົດຮຽນຫນຶ່ງຈາກຕົ້ນຫມາກເດື່ອ. ເມື່ອກິ່ງກ້ານມັນແຕກໃບອ່ອນອອກ, ພວກທ່ານກໍຮູ້ວ່າຣະດູຮ້ອນໃກ້ຈະມາເຖິງແລ້ວ. 33ດັ່ງນັ້ນແຫລະ
ຢ່າງດຽວກັນ, ເມື່ອພວກທ່ານເຫັນເຫດການເຫລົ່ານີ້, ທ່ານຈົ່ງຮູ້ວ່າພຣະອົງສະເດັດມາໃກ້, ຈະເຖິງປະຕູແລ້ວ.
34ເຮົາບອກພວກທ່ານຕາມຄວາມຈິງວ່າ, ຄົນໃນສະໄຫມນີ້ຈະບໍ່ລ່ວງລັບໄປ ກ່ອນເຫດການທັງປວງນີ້ບັງເກີດຂຶ້ນ. 35ຟ້າ ແລະ ດິນກໍຈະລ່ວງພົ້ນໄປ,
ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ.”
36ແຕ່ເລື່ອງວັນ ແລະ ໂມງນັ້ນບໍ່ມີໃຜຮູ້, ແມ່ນກະທັ້ງທູດສະຫວັນໃນສະຫວັນ, ຫລື ພຣະບຸດກໍບໍ່ຮູ້, ມີແຕ່ພຣະບິດາອົງດຽວເທົ່ານັ້ນທີ່ຮູ້.
37ດ້ວຍວ່າສະໄຫມຂອງໂນອາໄດ້ເປັນຢ່າງໃດ, ການສະເດັດມາຂອງບຸດມະນຸດກໍຈະເປັນຢ່າງນັ້ນ. 38ເພາະວ່າກ່ອນທີ່ຈະມີນ້ຳຖ້ວມນັ້ນ ຄົນທັງ-
ຫລາຍໄດ້ກິນແລະດື່ມ, ໄດ້ແຕ່ງງານແລະຍົກໃຫ້ເປັນຜົວເມັຍກັນ, ຈົນເຖິງວັນທີ່ໂນອາໄດ້ເຂົ້າໄປໃນນາວາ, 39ແລະໂດຍບໍ່ທັນໄດ້ຮູ້ຕົວຢ່າງໃດ
ຈົນເຖິງເວລານ້ຳໄດ້ມາຖ້ວມກວາດເອົາພວກເຂົາໄປ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ.
40ໃນເວລານັ້ນຈະມີຊາຍສອງຄົນຢູ່ທົ່ງນາ ຈະຊົງຮັບຄົນຫນຶ່ງໄປ ຈະຊົງປະຄົນຫນຶ່ງໄວ້. 41ຍິງສອງຄົນກຳລັງໂມ້ແປ້ງຢູ່, ຈະຊົງຮັບຄົນຫນຶ່ງໄວ້
ຈະຊົງປະຄົນຫນຶ່ງໄວ້. 42ເຫດສັນນັ້ນພວກທ່ານຈົ່ງເຝົ້າຣະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າ ອົງພຣະຜູ້ເປັນເຈົ້າຂອງພວກທ່ານຈະສະເດັດມາໃນເວ-
ລາໃດ.
43ແຕ່ຈົ່ງເຂົ້າໃຈຢ່າງນີ້ວ່າ, ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນວ່າໂຈນຈະມາຍາມໃດໃນຍາມກາງຄືນ, ເຂົາກໍຈະເຝົ້າຣະວັງໄວ້ ແລະ
ບໍ່ໃຫ້ໂຈນເຈາະເຂົ້າເຮືອນໄດ້. 44ເພາະເຫດນັ້ນ ພວກທ່ານກໍເຫມືອນກັນ ຈົ່ງຕຽມໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ທັນຄິດນັ້ນ ບຸດມະ-
ນຸດຈະສະເດັດມາ.”


generated on Tue Jun 17 19:01:42 2025

[45]ດັ່ງນັ້ນ ຜູ້ໃດເປັນຂ້າໃຊ້ສັດຊື່ແລະສະຫລາດ ທີ່ນາຍໄດ້ຕັ້ງໄວ້ໃຫ້ເປັນໃຫຍ່ເຫນືອພວກຄົນໃຊ້ໃນເຮືອນຂອງຕົນ
ເພື່ອແຈກອາຫານໃຫ້ເຂົາຕາມເວລາ.[46]ຄົນຮັບໃຊ້ຜູ້ນີ້ກໍຈະເປັນສຸກ, ເມື່ອຜູ້ເປັນນາຍກັບມາ[47]ນາຍຈະຕັ້ງຜູ້ນັ້ນໄວ້ເຫນືອບັນດາຊັບສິນ-
ຂອງເຂົາທຸກຢ່າງ.
[48]ແຕ່ຖ້າຂ້າໃຊ້ຜູ້ນັ້ນຊົ່ວ ຄຶດໃນໃຈວ່າ ‘ນາຍຂອງເຮົາຄົງອອກມາຊ້າ’,[49]ລາວກໍຈະຂ່ຽນຕີຄົນຮັບໃຊ້ດ້ວຍກັນທັງກິນແລະດື່ມນຳຄົນຂີ້ເຫລົ້າ;
[50]ແລ້ວວັນຫນຶ່ງນາຍກັບມາໂດຍທີ່ລາວບໍ່ຄາດຄິດ[51]ນາຍຂອງຂ້າໃຊ້ຜູ້ນັ້ນຈະຜ່າລາວອອກເປັນຕ່ອນໆ
ແລະຈະຂັບໄລ່ໃຫ້ໄປຢູ່ກັບຄົນຫນ້າຊື່ໃຈຄົດ ເຊິ່ງບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່.”

 generated on Tue Jun 17 19:01:42 2025

25 1ຣາຊະອານາຈັກສະຫວັນຈະປຽບເຫມືອນສາວປອດສິບຄົນ ທີ່ຖືໂຄມຂອງຕົນອອກໄປຮັບເຈົ້າບ່າວ.2ໃນພວກນາງເປັນຄົນໂງ່ຫ້າຄົນ ແລະ
ຄົນສະຫລາດຫ້າຄົນ.3ຝ່າຍຄົນໂງ່ນັ້ນເອົາໂຄມຂອງຕົນໄປ ແຕ່ບໍ່ໄດ້ເອົານ້ຳມັນໄປນຳ.4ແຕ່ຄົນສະຫລາດນັ້ນໄດ້ເອົານ້ຳ-
ມັນໃສ່ກວດກັບທັງໂຄມຂອງຕົນໄປດ້ວຍ.

5ເນື່ອງຈາກເຈົ້າບ່າວຍັງມາລ້າຊ້າຢູ່ ເຂົາກໍພາກັນເຫງົານອນແລະຫລັບໄປ.6'ເບິ່ງແມ, ເຈົ້າບ່າວມາແລ້ວ! ຈົ່ງອອກມາແລະຕ້ອນຮັບເພິ່ນສາ'.
7ຍິງສາວທຸກຄົນຈຶ່ງລຸກຂຶ້ນແລະຈັດຕຽມໂຄມໄຟຂອງຕົນ8ຝ່າຍຄົນໂງ່ນັ້ນຈຶ່ງເວົ້າກັບພວກຄົນສະຫລາດວ່າ 'ຂໍປັນນ້ຳ-
ມັນຂອງເຈົ້າໃຫ້ພວກເຮົາແດ່ ເພາະວ່າໂຄມຂອງເຮົາກຳລັງຈະມອດແລ້ວ.9ແຕ່ຝ່າຍພວກສະຫລາດຈຶ່ງຕອບວ່າ 'ຫນ້າຢ້ານວ່ານ້ຳມັນຈະບໍ່ພໍສຳ-
ລັບເຮົາແລະເຈົ້າ ຈົ່ງໄປຫາຜູ້ຂາຍແລ້ວຊື້ເອົາສຳລັບຕົນກໍດີກວ່າ.'
10ຂະນະທີ່ພວກເຂົາກຳລັງໄປຊື້ນ້ຳມັນນັ້ນ ເຈົ້າບ່າວກໍມາເຖິງ ແລະຜູ້ທີ່ພ້ອມຢູ່ແລ້ວກໍເຂົ້າໄປນຳເຈົ້າບ່າວໃນການລ້ຽງເນື່ອງໃນງານສົມລົດ
ແລ້ວປະຕູກໍອັດເສັຽ11ຫລັງຈາກນັ້ນຍິງສາວປອດພວກອື່ນນັ້ນມາຮ້ອງວ່າ 'ນາຍເອີຍ, ນາຍເອີຍ ຂໍໄຂປະຕູໃຫ້ຫມູ່ຂ້າ-
ນ້ອຍແດ່.'12ແຕ່ເພິ່ນໄດ້ຕອບວ່າ 'ເຮົາບອກຄວາມຈິງກັບທ່ານທັງລາຍວ່າ ເຮົາບໍ່ຮູ້ຈັກພວກທ່ານ.'13ພວກທ່ານຈົ່ງເຝົ້າຣະວັງຢູ່ ເພາະທ່ານທັງ-
ຫລາຍບໍ່ຮູ້ຈັກວັນຫລືໂມງນັ້ນ."
14ຣາຊະອານາຈັກສະຫວັນຍັງປຽບເຫມືອນຊາຍຜູ້ຫນຶ່ງກຳລັງຈະອອກເດີນທາງໄປ.
ຈຶ່ງເອີ້ນພວກຂ້ອຍໃຊ້ຂອງຕົນມາຝາກຊັບສົມບັດໄວ້ກັບເຂົາ.15ຄົນຫນຶ່ງໄດ້ຮັບເງິນຫ້າຕາລັນຕົນ ຄົນຫນຶ່ງສອງຕາລັນຕົນ,
ແລະອີກຄົນຫນຶ່ງໃຫ້ຕາລັນຕົນດຽວ ຕາມຄວາມສາມາດຂອງແຕ່ລະຄົນ, ແລ້ວກໍອອກເດີນທາງໄປ.
16ຜູ້ທີ່ໄດ້ຮັບຫ້າຕາລັນຕົນກໍເອົາເງິນນັ້ນໄປຄ້າຂາຍທັນທີ ແລະໄດ້ກຳໄຣອີກຫ້າຕາລັນຕົນ.
17ໃນທຳນອງດຽວກັນ ຄົນທີ່ຮັບສອງຕາລັນຕົນກໍໄດ້ກຳໄຣອີກສອງຕະລັນຕົນເຫມືອນກັນ.18ແຕ່ຜູ້ໄດ້ຮັບຕາລັນຕົນດຽວກໍໄດ້ໄປ ແລະຂຸດຂຸມ
ແລ້ວເຊື່ອງເງິນນາຍໄວ້.
19ຢູ່ດົນນານຕໍ່ມານາຍຂອງຂ້ອຍໃຊ້ເຫລົ່ານັ້ນກໍກັບມາ ແລະຄິດບັນຊີກັບພວກເຂົາ.20ກໍເອົາເງິນກຳໄຣຫ້າຕາລັນຕົນມາແຈ້ງວ່າ 'ນາຍເອີຍ,
ນາຍໄດ້ຝາກເງິນຫ້າຕາລັນຕົນໄວ້ນຳຂ້ານ້ອຍ ນີ້ແຫລະ, ຂ້ານ້ອຍໄດ້ກຳໄຣຕື່ມອີກຫ້າຕາລັນຕົນ.'21'ດີແລ້ວ, ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ
ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງ. ຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເຖີ້ນ'.
22'ນາຍເອີຍ, ນາຍໄດ້ຝາກເງິນສອງຕາລັນຕົນໄວ້ນຳຂ້ານ້ອຍ ນີ້ແຫລະ, ຂ້ານ້ອຍໄດ້ກຳໄຣອີກສອງຕາລັນຕົນ.'23ຝ່າຍນາຍກໍຕອບວ່າ 'ດີແລ້ວ,
ຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ ເຈົ້າເປັນສັດຊື່ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງ. ຈົ່ງເຂົ້າຮ່ວມຄວາມຍິນ-
ດີກັບນາຍເຈົ້າເຖີ້ນ.'
24ຫຼັງຈາກນັ້ນ ຜູ້ທີ່ໄດ້ຮັບຕາລັນຕົນດຽວນັ້ນກໍໄດ້ເຂົ້າມາເຫມືອນກັນແຈ້ງວ່າ 'ນາຍເອີຍ, ຂ້ານ້ອຍຮູ້ຈັກທ່ານແລ້ວວ່າທ່ານເປັນຄົນໃຈແຂງ,
ເຄີຍກ່ຽວຜົນໃນສິ່ງທີ່ຕົນບໍ່ໄດ້ຫວ່ານ, ແລະຮິບໂຮມເອົາສິ່ງທີ່ຕົນບໍ່ໄດ້ຝັດ.25ຂ້າ-
ນ້ອຍຢ້ານຈຶ່ງໄດ້ເອົາເງິນຕາລັນຕົນຂອງທ່ານໄປເຊື່ອງໄວ້ໃຕ້ພື້ນດິນ. ເບິ່ງແມ, ນີ້ຄືສິ່ງທີ່ເປັນຂອງທ່ານ.'
26'ອ້າຍຂ້ອຍໃຊ້ຊົ່ວແລະຂີ້ຄ້ານເອີຍ ເຈົ້າຮູ້ແລ້ວວ່າເຮົາເຄີຍເກັບຜົນໃນສິ່ງທີ່ເຮົາບໍ່ໄດ້ຫວ່ານ ແລະ ຮິບໂຮມເອົາສິ່ງທີ່ເຮົາບໍ່ໄດ້ຝັດ.
27ເຫດສັນນັ້ນ, ເຈົ້າຄວນຈະເອົາເງິນຂອງເຮົາໄປຝາກໄວ້ກັບນາຍທະນາຄານ
ແລະເມື່ອເຮົາກັບມາກໍຈະໄດ້ຮັບສິ່ງທີ່ເປັນຂອງເຮົາກັບທັງດອກເບ້ຽ.
28ແລະເອົາໃຫ້ແກ່ຜູ້ມີສິບຕາລັນຕົນ.29ເພາະທຸກຄົນທີ່ມີຢູ່ແລ້ວຈະຊົງເພີ່ມຕື່ມໃຫ້ຈົນມີບໍຣິບູນ. ແຕ່ຜູ້ທີ່ບໍ່ມີ,
ແມ່ນວ່າສິ່ງທີ່ຕົນມີຢູ່ນັ້ນກໍຈະຊົງຍຶກໄປຈາກຕົນເສັຽ.30ເອົາອ້າຍຂ້າໃຊ້ຜູ້ບໍ່ມີປະໂຫຍດໄປຖິ້ມເສັຽບ່ອນມືດພາຍນອກ ແລະບ່ອນນັ້ນຈະມີ-
ການຮ້ອງໄຫ້ແລະຂົບແຂ້ວຢູ່."
31ເມື່ອບຸດມະນຸດຊົງກັບມາດ້ວຍພຣະຣັດສະຫມີ ແລະມາພ້ອມດ້ວຍຝູງເທວະດາ, ເມື່ອນັ້ນພຣະອົງຈະຊົງປຣະທັບເທິງພຣະທີ່ນັ່ງອັນຮຸ່ງ-
ເຮືອງຂອງພຣະອົງ.32ຈະຖືກຊົງໂຮມກັນຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະຊົງແຍກເຂົາອອກຈາກກັນ, ເໝືອນຜູ້ລ້ຽງ-
ສັດແຍກຝູງແກະອອກຈາກຝູງແບ້.33ພຣະອົງຈະໃຫ້ຝູງແກະນັ້ນຈັດໃຫ້ຢູ່ເບື້ອງຂວາພຣະຫັດຂອງພຣະອົງ,
ແຕ່ຝູງແບ້ນັ້ນຈະຊົງຈັດໃຫ້ຢູ່ເບື້ອງຊ້າຍຂອງພຣະອົງ.
34ຫຼັງຈາກນັ້ນ ພຣະມະຫາກະສັດຈະຊົງກ່າວແກ່ບັນດາຜູ້ທີ່ຢູ່ເທິງພຣະຫັດຂວາຂອງພຣະອົງວ່າ 'ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິ-
ດາຂອງເຮົາເອີຍ, ຈົ່ງມາຮັບເອົາຣາຊະອານາຈັກ ຊຶ່ງໄດ້ ຊົງຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ວາງຮາກສ້າງໂລກ.35ພວກທ່ານກໍໃຫ້ເຮົາກິນ;
ເຮົາຫິວນ້ຳ ພວກທ່ານກໍໃຫ້ເຮົາດື່ມ; ເຮົາເປັນແຂກແປກຫນ້າ ພວກທ່ານກໍໄດ້ຕ້ອນຮັບເຮົາໄວ້;36ເຮົາເປືອຍຕົວ
ພວກທ່ານກໍໄດ້ເອົາເຄື່ອງມາໃຫ້ເຮົານຸ່ງຫົ່ມ; ເຮົາເຈັບປ່ວຍ ພວກທ່ານກໍມາຢ້ຽມຢາມເຮົາ; ເຮົາຢູ່ໃນຄຸກພວກທ່ານກໍມາໄດ້ຫາ.'
37ເມື່ອນັ້ນບັນດາພວກສິລະທັມຈະທູນວ່າ 'ພຣະອົງເຈົ້າເອີຍ, ພວກຂ້າພະອົງໄດ້ເຫັນພຣະອົງຊົງຢາກເຂົ້າຫລືຫິວນ້ຳ ແລ້ວໄດ້ຈັດມາຖວາຍພຣະ-
ອົງເມື່ອໃດ?38ແລະໄດ້ຕ້ອນຮັບໄວ້? ຫລືຊົງເປືອຍພຣະກາຍແລ້ວໄດ້ເອົາເຄື່ອງມາໃຫ້ນຸ່ງເມື່ອໃດ?'39ພວກຂ້າໄດ້ເຫັນພຣະອົງຊົງປະຊວນຢູ່
ຫລືຢູ່ໃນຄຸກ ແລະໄດ້ມາເຝົ້າພຣະອົງເມື່ອໃດ?'40ແລະພຣະມະຫາກະສັດຈະຊົງຕອບວ່າ 'ເຮົາບອກຄວາມຈິງກັບທ່ານທັງຫລາຍວ່າ
ສິ່ງທີ່ພວກທ່ານໄດ້ເຮັດການເຫລົ່ານີ້ແກ່ພວກຕ່ຳຕ້ອຍທີ່ສຸດຄົນຫນຶ່ງໃນພວກພີ່ນ້ອງຂອງເຮົານີ້, ກໍໄດ້ເຮັດໃຫ້ເຮົາເຫມືອນກັນ.'
41ແລະໃນວັນນັ້ນພຣະອົງຈະຊົງກ່າວກັບບັນດາຜູ້ທີ່ຢູ່ເບື້ອງພຣະຫັດຊ້າຍຂອງພຣະອົງວ່າ 'ສູທັງ-
ຫລາຍຜູ້ຖືກສາບແຊ່ງຈົ່ງຖອຍຫນີຈາກເຮົາແລະເຂົ້າໄປຢູ່ໃນໄຟທີ່ໄຫມ້ຢູ່ເປັນນິດ ຊຶ່ງຊົງຈັດຕຽມໄວ້ສຳລັບມານຊາຕານແລະບໍລິວານຂອງມັນ.
42ເມື່ອເຮົາຫິວເຂົ້າ ສູບໍ່ໄດ້ໃຫ້ເຮົາກິນ ເຮົາຫິວນ້ຳ ສູບໍ່ໃຫ້ເຮົາດື່ມ;43ເມື່ອເຮົາເປັນແຂກບ້ານສູບໍ່ໄດ້ຕ້ອນຮັບເຮົາ; ເຮົາເປືອຍຕົວ
ແຕ່ສູບໍ່ໄດ້ເອົາເຄື່ອງມາໃຫ້ນຸ່ງ; ເຮົາເຈັບປ່ວຍແລະຢູ່ໃນຄຸກ ແຕ່ສູບໍ່ໄດ້ມາຢ້ຽມຢາມເຮົາ.'
44'ພຣະອົງເຈົ້າເອີຍ, ພວກຂ້ານ້ອຍໄດ້ເຫັນພຣະອົງຊົງຢາກເຂົ້າຫລືຊົງຫິວນ້ຳ ຊົງເປັນແຂກແປກຫນ້າ, ຊົງເປືອຍພຣະກາຍ,
ຊົງເຈັບປ່ວຍຫລືຊົງຢູ່ໃນຄຸກ ແລະພວກຂ້ານ້ອຍບໍ່ໄດ້ປະຕິບັດພຣະອົງຍາມໃດ?'45ເມື່ອນັ້ນພຣະອົງຈະຊົງຕອບແກ່ເຂົາວ່າ 'ເຮົາບອກສູທັງ-
ຫລາຍຄວາມຈິງວ່າ, ທີ່ສູບໍ່ໄດ້ເຮັດການເຫລົ່ານັ້ນແກ່ຜູ້ຕ່ຳຕ້ອຍທີ່ສຸດໃນພວກນີ້, ພວກສູກໍບໍ່ໄດ້ເຮັດແກ່ເຮົາເຫມືອນກັນ.'46ແລ້ວພວກເຫລົ່ານີ້
ຈະອອກໄປສູ່ໂທດອັນຕະຫລອດໄປເປັນນິດ ແຕ່ພວກສິລະທັມກໍເຂົ້າສູ່ຊີວິດອັນຕະຫລອດ ໄປເປັນນິດ.


generated on Tue Jun 17 19:01:42 2025

26 [1]ເມື່ອພຣະເຢຊູເຈົ້າກ່າວຖ້ອຍຄຳເຫລົ່ານີ້ຈົບ ພຣະອົງຊົງບອກພວກສາວົກຂອງຕົນວ່າ, [2]“ພວກທ່ານທັງ-
ຫລາຍຮູ້ຢູ່ວ່າອີກສອງວັນກໍຈະເຖິງເທສະການປັດສະຄາ ແລະບຸດມະນຸດຈະຖືກມອບໄວ້ໃຫ້ເຂົາຕອກຄຶງໄວ້ທີ່ໄມ້ກາງແຂນ.”

[3]ຈາກນັ້ນພວກປະໂລຫິດຕົນໃຫຍ່ກັບພວກເຖົ້າແກ່ຂອງພົນລະເມືອງໄດ້ປະຊຸມກັນຢູ່ທີ່ສຳນັກຂອງມະຫາປະໂລຫິດຊື່ກາຍະຟາ. [4]ພວກເຂົາປຶກ-
ສາກັນເພື່ອຈະໄດ້ຈັບພຣະເຢຊູດ້ວຍກົນອຸບາຍ ແລະຈະຂ້າພຣະອົງເສັຽ. [5]“ຈະບໍ່ເຮັດໃນລະຫວ່າງວັນເທສະການ
ເພື່ອບໍ່ໃຫ້ເກີດຄວາມວຸ້ນວາຍທ່າມກາງພົນລະເມືອງ.”
[6]ໃນລະຫວ່າງທີ່ພຣະເຢຊູເຈົ້າປຣະທັບຢູ່ບ້ານເບັດທານີໃນເຮືອນຂອງຊີໂມນຄົນຂີ້ທູດ, [7]ມີຍິງຜູ້ຫນຶ່ງຖືເຕົ້າຫີນຂາວເຕັມດ້ວຍນ້ຳມັນຫອມທີ່ມີລາ-
ຄາແພງເຂົ້າມາເຝົ້າພຣະອົງ ແລ້ວນາງໄດ້ຖອກນ້ຳຫອມໃສ່ພຣະສຽນຂອງພຣະອົງ. [8]ແຕ່ເມື່ອພວກສາວົກເຫັນດັ່ງນັ້ນກໍເຄືອງໃຈແລະຈຶ່ງເວົ້າວ່າ,
“ເຫດໃດຈຶ່ງເຮັດໃຫ້ເສັຽຂອງ ຢ່າງນີ້? [9]ເພາະຖ້າຂາຍນ້ຳມັນຫອມນີ້ກໍຄົງໄດ້ເງິນຫລວງຫລາຍແລ້ວຈະແຈກໃຫ້ຄົນຍາກຈົນກໍໄດ້.”
[10]ແຕ່ພຣະເຢຊູຊົງຊາບຄວາມຄິດນີ້, ຈຶ່ງໄດ້ກ່າວແກ່ເຂົາວ່າ, “ເປັນຫຍັງພວກທ່ານກວນໃຈຍິງນີ້? ເພາະນາງໄດ້ເຮັດການດີແກ່ເຮົາແລ້ວ.
[11]ດ້ວຍວ່າຄົນຍາກຈົນມີຢູ່ກັບພວກທ່ານສະເຫມີ, ແຕ່ຝ່າຍເຮົາບໍ່ຢູ່ກັບພວກທ່ານສະເຫມີໄປ.
[12]ດ້ວຍວ່າການທີ່ນາງໄດ້ຖອກນ້ຳມັນຫອມໃສ່ກາຍຂອງເຮົາ, ນາງກໍໄດ້ເຮັດເພື່ອການຝັງຂອງເຮົາ. [13]ເຮົາບອກພວກທ່ານຕາມຄວາມຈິງວ່າ,
ບ່ອນໃດກໍຕາມ ທີ່ຂ່າວປະເສີດນີ້ໄດ້ຖືກເທສະຫນາປະກາດໃນທົ່ວໂລກ, ໃນສິ່ງທີ່ຍິງຄົນນີ້ໄດ້ກະທຳ ເພື່ອເປັນທີ່ຣະນຶກເຖິງນາງ.”
[14]ເວລານັ້ນຜູ້ຫນຶ່ງໃນພວກສິບສອງດັ່ງກ່າວ, ຜູ້ຊື່ຢູດາອິສະກາຣີອົດ, ໄດ້ໄປຫາພວກຫົວໜ້າປະໂລຫິດ, [15]ແລະໄດ້ກ່າວວ່າ, “ພວກທ່ານ,
ຂ້ານ້ອຍຈະມອບພຣະອົງໃຫ້ແກ່ພວກທ່ານ ແລ້ວພວກທ່ານຈະຍອມໃຫ້ອັນໃດໃຫ້ແກ່ຂ້ານ້ອຍ?” ພວກເຂົາຈຶ່ງເອົາເງິນສາມສິບຫລຽນໃຫ້ແກ່ຢູ-
ດາ. [16]ຕັ້ງແຕ່ນັ້ນມາ ຢູດາໄດ້ຊອກຫາໂອກາດເພື່ອຈະມອບພຣະອົງໄວ້ກັບພວກຫົວຫນ້າປະໂລຫິດ.
[17]ເມື່ອວັນຕົ້ນເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ພວກສາວົກໄດ້ມາທູນຖາມພຣະອົງວ່າ, “ທ່ານປະສົງຈະໃຫ້ພວກຂ້ານ້ອຍຈັດແຈ່ງປັດສະ-
ຄາໃຫ້ເພິ່ນຮັບປະທານບ່ອນໃດ?” [18]ພຣະອົງຊົງຕອບວ່າ, “ຈົ່ງເຂົ້າໄປຫາຄົນຫນຶ່ງໃນເມືອງ ແລະ ບອກວ່າ ‘ອາຈານກ່າວວ່າ ເວລາກຳ-
ນົດຂອງເຮົາມາໃກ້ແລ້ວ ເຮົາຈະຖືສິລປັດສະຄາທີ່ເຮືອນຂອງທ່ານພ້ອມກັບສາວົກຂອງເຮົາ.” [19]ແລ້ວພວກສາວົກຈຶ່ງໄດ້ເຮັດຕາມທີ່ພຣະ-
ເຢຊູເຈົ້າຊົງສັ່ງ ແລະ ພວກເຂົາໄດ້ຈັດແຈ່ງປັດສະຄາໄວ້ພ້ອມ.
[20]ຄັນເຖິງເວລາຄ່ຳແລ້ວພຣະອົງຊົງປະທັບຮ່ວມໂຕະກັບພວກສາວົກສິບສອງຄົນ. [21]ຂະນະກຳລັງຮັບປະທານອາຫານຢູ່, ພຣະອົງຊົງກ່າວວ່າ,
“ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນຫນຶ່ງໃນພວກທ່ານຈະທໍຣະຍົດຕໍ່ເຮົາ.” [22]ຝ່າຍສາວົກກໍມີຄວາມທຸກໃຈຫລາຍ, ແລະ
ທຸກຄົນຕ່າງກໍຕັ້ງຕົ້ນທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ ບໍ່ອາດຈະແມ່ນຂ້ານ້ອຍຕື?”
[23]ພຣະອົງຊົງຕອບວ່າ, “ຜູ້ທີ່ໄດ້ຈ້ຳຮ່ວມຈານດຽວກັນກັບເຮົານີ້ແຫລະ ຄືຄົນຈະທໍຣະຍົດຕໍ່ເຮົາ. [24]ບຸດມະ-
ນຸດສະເດັດໄປຕາມທີ່ໄດ້ຂຽນໄວ້ໃນພຣະຄັມພີເຖິງເລື່ອງພຣະອົງນັ້ນ ແຕ່ວິບັດແກ່ຜູ້ທີ່ຈະທໍຣະຍົດຕໍ່ບຸດມະນຸດ ຖ້າຜູ້ນັ້ນບໍ່ເກີດມາກໍດີກວ່າ.” [25]ຢູ-
ດາຜູ້ທີ່ທໍຣະຍົດຕໍ່ພຣະອົງທູນຖາມວ່າ, “ພຣະອາຈານ ບໍ່ອາດຈະແມ່ນຂ້ານ້ອຍຕື?” ພຣະອົງຊົງຕອບວ່າ, “ທ່ານເວົ້າເອງແລ້ວ.”
[26]ລະຫວ່າງກຳລັງຮັບປະທານອາຫານຢູ່ນັ້ນ, ພຣະເຢຊູຊົງຈັບເຂົ້າຈີ່ມາ ແລະ ເມື່ອຂໍພຣະພອນແລ້ວ. ພຣະອົງຊົງຫັກເຂົ້າຈີ່ນັ້ນໃຫ້ພວກສາວົກ
ໂດຍຊົງກ່າວວ່າ, “ຈົ່ງຮັບ, ແລະກິນສາເຖີດ, ນີ້ແຫລະຄືກາຍຂອງເຮົາ.”
[27]ແລ້ວພຣະອົງຊົງຈັບເອົາຈອກມາໂມທະນາຂອບພຣະຄຸນ, ແລະ ໄດ້ຍື່ນໃຫ້ເຂົາ ໂດຍຊົງກ່າວວ່າ, “ຈົ່ງດື່ມຈອກນີ້, ທຸກຄົນເຖີດ.
[28]ເພາະວ່ານີ້ແຫລະເປັນເລືອດແຫ່ງພັນທະສັນຍາທີ່ຫລັ່ງອອກມາ ເພື່ອຍົກໂທດບາບຂອງຄົນຈຳນວນຫລາຍ. [29]ແຕ່ເຮົາບອກທ່ານທັງຫລາຍວ່າ
ເຮົາຈະບໍ່ດື່ມນ້ຳຜົນອະງຸ່ນຕໍ່ໄປອີກຈົນກວ່າວັນນັ້ນຈະມາເຖິງ ຄືວັນທີ່ຈະດື່ມນ້ຳອະງຸ່ນໃຫມ່ກັບພວກທ່ານໃນຣາຊະອານາຈັກພຣະບິ-
ດາຂອງເຮົາ.”
[30]ເມື່ອພວກເຂົາຮ້ອງເພງສັນຣະເສີນແລ້ວ, ພວກເຂົາກໍພາກັນອອກໄປຍັງພູຫມາກກອກເທດ. [31]ແລ້ວເມື່ອນັ້ນພຣະເຢຊູຊົງກ່າວກັບພວກສາ-
ວົກວ່າ, “ໃນຄືນນີ້ທ່ານທຸກຄົນຈະສະດຸດໃຈເພາະເຮົາ, ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ ‘ເຮົາຈະປະຫານຜູ້ລ້ຽງແກະ ແລະ
ຝູງແກະນັ້ນຈະແຕກຊະກັນໄປ. [32]ແຕ່ຫຼັງຈາກທີ່ເຮົາຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍແລ້ວ, ເຮົາຈະໄປເຖິງແຂວງຄາລີ-
ເລກ່ອນຫນ້າພວກທ່ານ.”
[33]ຝ່າຍເປໂຕຈຶ່ງທູນຕອບພຣະອົງວ່າ, “ຖ້າຄົນທັງປວງຈະສະດຸດໃຈເພາະທ່ານ, ຝ່າຍຂ້ານ້ອຍຈະບໍ່ສະ-
ດຸດໃຈຈັກເທື່ອ.” [34]ພຣະເຢຊູເຈົ້າຊົງຕອບເປໂຕວ່າ, “ເຮົາບອກຄວາມຈິງກັບທ່ານວ່າ "ໃນຄືນວັນນີ້ກ່ອນໄກ່ຈະຂັນ ທ່ານຈະປະຕິ-
ເສດເຮົາເຖິງສາມເທື່ອ.” [35]ເປໂຕໄດ້ທູນຕອບພຣະອົງວ່າ, “ເຖິງແມ່ນຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ”
ຝ່າຍພວກສາວົກກໍທູນຢ່າງນັ້ນເຫມືອນກັບທຸກຄົນ.
[36]ແລ້ວພຣະເຢຊູເຈົ້າກໍສະເດັດພ້ອມກັບພວກສາວົກ ໄປເຖິງບ່ອນຫນຶ່ງຊື່ເຄັດເຊມາເນ ແລ້ວຊົງກ່າວກັບພວກເຂົາວ່າ, “ຈົ່ງນັ່ງຢູ່ທີ່ນີ້
ຂະນະທີ່ເຮົາຈະໄປອ້ອນວອນອະທິຖານຢູ່ທີ່ນັ້ນ.” [37]ພຣະອົງຊົງພາເປໂຕ ແລະ ລູກຊາຍທັງສອງຂອງເຊເບດາຍໄປນຳ ແລະ
ຊົງເລີ່ມຕົ້ນເກີດມີຄວາມໂສກເສົ້າ ແລະ ທຸກໃຈຫລາຍ. [38]ແລ້ວພຣະອົງຊົງກ່າວກັບພວກເຂົາວ່າ, “ຈິດໃຈຂອງເຮົາທຸກຫນັກແທບຈະຕາຍຢູ່ແລ້ວ,
ຈົ່ງຄອງຢູ່ ແລະ ເຝົ້າເບິ່ງກັບເຮົາຢູ່ທີ່ນີ້ເຖີ້ນ.”
[39]ພຣະອົງໄດ້ສະເດັດໄປຕື່ມອີກຫນ້ອຍຫນຶ່ງ, ຈຶ່ງຊົງຫມູບພຣະພັກລົງເຖິງດິນ ແລະ ໄດ້ອ້ອນວອນອະທິຖານວ່າ, “ໂອພຣະບິ-
ດາຂອງຂ້ານ້ອຍເອີຍ, ຖ້າເປັນໄດ້ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກລູກຖ້ອນ. ແຕ່ຢ່າງໃດກໍດີ, ຂໍຢ່າໃຫ້ເປັນໄປຕາມໃຈປາຖນາຂອງລູກ
ແຕ່ໃຫ້ເປັນໄປຕາມພຣະທັຍຂອງພຣະອົງເຖີ້ນ.” [40]ແລ້ວພຣະອົງໄດ້ສະເດັດກັບມາຫາສາວົກເຫລົ່ານັ້ນ ຊົງເຫັນເຂົານອນຫລັບຢູ່ ແລະ
ຊົງກ່າວແກ່ເປໂຕວ່າ, “ເປັນຈັ່ງໃດ ພວກທ່ານບໍ່ສາມາດຈະຄອຍເຝົ້າຢູ່ກັບເຮົາແມ່ນແຕ່ຊົ່ວໂມງດຽວບໍ? [41]ຈົ່ງເຝົ້າຣະວັງ ແລະ ອ້ອນວອນ
ຢູ່ເພື່ອພວກທ່ານຈະບໍ່ຕົກໃນການທົດລອງ ຈິດໃຈພ້ອມຢູ່ແລ້ວກໍຈິງ ແຕ່ກາຍກໍອ່ອນກຳລັງ.”
[42]ພຣະອົງໄດ້ສະເດັດອອກໄປອີກເປັນເທື່ອທີ່ສອງ ຊົງອ້ອນວອນວ່າ, “ພຣະບິດາຂອງຂ້ານ້ອຍເອີຍ, ຖ້າຈອກນີ້ເລື່ອນພົ້ນໄປບໍ່ໄດ້ເວັ້ນແຕ່ຂ້າ-
ນ້ອຍຈຳຕ້ອງດື່ມ, ແລ້ວກໍຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ.” [43]ພຣະອົງສະ-
ເດັດກັບຄືນມາກໍຊົງເຫັນພວກສາວົກນອນຫລັບຢູ່ເພາະຕາຂອງເຂົາມືນບໍ່ຂຶ້ນ. [44]ຈຶ່ງຊົງປະເຂົາໄວ້, ພຣະອົງກໍໄດ້ສະເດັດໄປອ້ອນ-
ວອນເປັນເທື່ອທີ່ສາມ ໂດຍຊົງກ່າວຄຳເກົ່ານັ້ນອີກ.


generated on Tue Jun 17 19:01:42 2025

[45]ແລ້ວພຣະເຢຊູເຈົ້າ ໄດ້ສະເດັດມາຍັງພວກສາວົກແລ້ວຊົງກ່າວວ່າ, “ພວກທ່ານຍັງນອນຫລັບເຊົາເມື່ອຍຢູ່ບໍ? ເບິ່ງແມ, ເວລາມາໃກ້ແລ້ວ,
ແລະ ບຸດມະນຸດກຳລັງຈະຖືກມອບໄວ້ໃນມືຄົນບາບ.[46]ຈົ່ງລຸກຂຶ້ນ ແລະ ໄປກັນເທາະ. ເບິ່ງແມ, ຜູ້ທີ່ທໍຣະຍົດເຮົານັ້ນມາໃກ້ແລ້ວ.”
[47]ໃນຂະນະທີ່ພຣະເຢຊູເຈົ້າຍັງຊົງກ່າວບໍ່ທັນຂາດຄຳ, ຫນຶ່ງໃນຈຳພວກສິບສອງຄົນນັ້ນຄືຢູດາ, ໄດ້ເຂົ້າມາພ້ອມດ້ວຍປະຊາຊົນຈຳນວນຫລາຍ
ມາພ້ອມກັບພວກຫົວໜ້າປະໂລຫິດ ກັບພວກຜູ້ອາວຸໂສຖືດາບ ແລະ ຖືໄມ້ຕະບອງມານຳ.
[48]ໃນເວລານັ້ນຄົນທີ່ຈະທໍຣະຍົດພຣະເຢຊູໄດ້ໃຫ້ສັນຍານໃຫ້ແກ່ເຂົາວ່າ, “ເຮົາຈະຈູບຜູ້ໃດ, ກໍແມ່ນຜູ້ນັ້ນແຫລະ ຈົ່ງຈັບກຸມລາວໄວ້.”
[49]ໃນທັນໃດນັ້ນເອງຢູດາເຂົ້າມາຫາພຣະເຢຊູເຈົ້າ ແລ້ວທູນວ່າ, “ສະບາຍດີ, ທ່ານອາຈານ!” ແລ້ວເຂົາກໍຈູບພຣະອົງ.
[50]ພຣະເຢຊູເຈົ້າຊົງກ່າວວ່າແກ່ຢູດາວ່າ, “ສະຫາຍເອີຍ, ທ່ານມາທີ່ນີ້ເຮັດຫຍັງ.” ແລ້ວຄົນເຫລົ່ານັ້ນເຂົ້າມາ, ແລະ ຍື່ນ-
ມືເພື່ອຈັບກຸມພຣະເຢຊູໄວ້.
[51]ເບິ່ງແມ, ມີຜູ້ຫນຶ່ງທີ່ຢູ່ກັບພຣະເຢຊູ ຊັກດາບອອກ ແລະ ໄດ້ຟັນຫູຂ້ອຍໃຊ້ຄົນຫນຶ່ງຂອງມະຫາປະໂລຫິດຂາດເບື້ອງຫນຶ່ງ.[52]ພຣະ-
ເຢຊູເຈົ້າຈຶ່ງຊົງບອກຜູ້ນັ້ນວ່າ, “ຈົ່ງເອົາດາບຂອງທ່ານມ້ຽນໄວ້, ເພາະວ່າບັນດາຜູ້ທີ່ຖືດາບກໍຈະຖືກທຳລາຍດ້ວຍດາບ.
[53]ທ່ານຄິດວ່າເຮົາຈະຮ້ອງຂໍຄວາມຊ່ວຍເຫລືອຈາກພຣະບິດາຂອງເຮົາບໍ່ໄດ້ບໍ? ແລະ ໃນທັນທີພຣະ-
ອົງຈະໃຊ້ຫມູ່ທູດສະຫວັນມາຫາເຮົາກວ່າສິບສອງກອງທັບບໍ່ໄດ້ບໍ?[54]ແຕ່ຖ້າຢ່າງນັ້ນພຣະຄັມພີທີ່ໄດ້ກ່າວໄວ້ ຈະເຮັດສຳເລັດໄດ້ຢ່າງໃດ,
ເພາະສະນັ້ນສິ່ງນີ້ຕ້ອງເກີດຂຶ້ນ?”
[55]ໃນເວລານັ້ນ ພຣະເຢຊູເຈົ້າໄດ້ຊົງກ່າວກັບປວງຊົນວ່າ, “ທ່ານທັງຫລາຍຖືດາບຖືໄມ້ຕະບອງອອກມາຈັບເຮົາເຫມືອນຈັບໂຈນບໍ? ເຮົາໄດ້ນັ່ງສັ່ງ-
ສອນໃນບໍລິເວນພຣະວິຫານທຸກວັນ ແລະ ພວກທ່ານບໍ່ໄດ້ຈັບເຮົາ.[56]ແຕ່ເຫດການທັງປວງນີ້ໄດ້ບັງເກີດຂຶ້ນເພື່ອຈະສຳເລັດຕາມທີ່ຜູ້ປະກາດພຣະ-
ທັມໄດ້ຂຽນໄວ້.” ຫລັງຈາກນັ້ນພວກສາວົກທັງຫມົດໄດ້ປະພຣະອົງ ແລະ ໄດ້ພາກັນຫນີໄປ.
[57]ພວກທີ່ຈັບພຣະເຢຊູໄດ້ພາພຣະອົງໄປຫາມະຫາປະໂລຫິດຊື່ກາຢະຟາ, ບ່ອນທີ່ພວກນັກທັມ ແລະ ພວກຜູ້ອາວຸໂສໄດ້ມາປະຊຸມກັນນັ້ນ.
[58]ແຕ່ເປໂຕໄດ້ຕາມພຣະອົງໄປໃນໄລຍະຫ່າງໆ ຈົນມາເຖິງເດີ່ນບ້ານຂອງມະຫາປະໂລຫິດແລ້ວເຂົ້າໄປນັ່ງຢູ່ກາງເດີ່ນບ້ານກັບພວກຍາມ
ເພື່ອຊອມເບິ່ງວ່າທີ່ສຸດຂອງເລື່ອງນັ້ນຈະເປັນຢ່າງໃດ.
[59]ໃນເວລານັ້ນ ພວກຫົວໜ້າປະໂລຫິດ ກັບບັນດາສະມາຊິກສານ ໄດ້ຫາພະຍານຕົວະມາເບີກຕໍ່ສູ້ພຣະເຢຊູເຈົ້າ, ເພື່ອຂ້າພຣະອົງເສັຽ.
[60]ເຖິງແມ່ນວ່າມີພະຍານຕົວະຫລາຍປາກມາໃຫ້ການກໍດີ ແຕ່ພວກເຂົາກໍຫາຫລັກຖານຫຍັງບໍ່ໄດ້. ແຕ່ຫລັງຈາກນັ້ນມີສອງຄົນໄດ້ມາໃຫ້-
ການວ່າ,[61]“ຜູ້ນີ້ແຫລະ, ໄດ້ກ່າວວ່າເຮົາສາມາດຈະມ້າງພຣະວິຫານຂອງພຣະເຈົ້າ ແລະ ຈະສ້າງຂຶ້ນໃຫມ່ພາຍໃນສາມວັນ’.”
[62]ມະຫາປະໂລຫິດໄດ້ຢືນຂຶ້ນແລະ ໄດ້ຖາມພຣະອົງວ່າ, “ເຈົ້າຈະບໍ່ຕອບຫຍັງບໍ? ຄຳພະຍານທີ່ຄົນເຫລົ່ານີ້ກ່າວຕໍ່-
ສູ້ເຈົ້າດ້ວຍເລື່ອງອັນໃດ?”[63]ແຕ່ພຣະເຢຊູເຈົ້າຊົງມິດຢູ່ ແລ້ວມະຫາປະໂລຫິດຈຶ່ງກ່າວວ່າ, “ເຮົາໃຫ້ເຈົ້າສາບານໂດຍອ້າງພຣະເຈົ້າຜູ້ຊົງພຣະ-
ຊົນຢູ່, ໃຫ້ເຈົ້າບອກເຮົາວ່າເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລືບໍ່?”[64]ພຣະເຢຊູເຈົ້າຊົງຕອບເຂົາວ່າ, “ທ່ານເວົ້ານັ້ນແລ້ວ,
ແຕ່ເຮົາບອກພວກທ່ານວ່າ ຕັ້ງແຕ່ນີ້ຕໍ່ໄປພວກທ່ານຈະເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບ ແລະ ກຳລັງສະ-
ເດັດມາເທິງເມກໃນທ້ອງຟ້າ.”
[65]ແລ້ວມະຫາປະໂລຫິດໄດ້ຈີກເສື້ອຜ້າຂອງຕົນອອກ ແລະ ກ່າວວ່າ, “ມັນໄດ້ເວົ້າຫມິ່ນປະຫມາດພຣະເຈົ້າແລ້ວ! ແລ້ວພວກເຮົາຍັງຈະຕ້ອງ-
ການພະຍານອັນໃດອີກ? ນີ້ແຫລະ, ທ່ານໄດ້ຍິນຄຳປະຫມາດພຣະເຈົ້ານັ້ນແລ້ວ.[66]ພວກທ່ານຄິດເຫັນຢ່າງໃດ?” ພວກເຂົາກໍຕອບວ່າ,
“ມັນສົມຄວນຕາຍ.”
[67]ແລ້ວພວກເຂົາໄດ້ຖົ່ມນ້ຳລາຍໃສ່ພຣະພັກ ແລະ ທັງທຸບຕີພຣະອົງ, ແລະ ບາງຄົນໄດ້ເອົາມືຕົບພຣະອົງ,[68]ແລ້ວເວົ້າວ່າ, “ຖ້າແມ່ນພຣະຄຣິດ,
ຈົ່ງທວາຍໃຫ້ແກ່ພວກເຮົາຮັບຮູ້ວ່າແມ່ນໃຜຕົບມຶງ?”
[69]ຂະນະທີ່ເປໂຕນັ່ງຢູ່ນອກກາງເດີ່ນນອກບ້ານຢູ່ນັ້ນ, ແລະ ມີຍິງໃຊ້ຄົນຫນຶ່ງມາຫາກ່າວວ່າ, “ເຈົ້າເຄີຍຢູ່ກັບເຢຊູໄທຄາລີ-
ເລເຫມືອນກັນ.”[70]ແຕ່ເປໂຕຕອບປະຕິເສດຕໍ່ຫນ້າຄົນທັງປວງ ໂດຍກ່າວວ່າ, “ທີ່ເຈົ້າເວົ້ານັ້ນ, ຂ້ອຍບໍ່ຮູ້ເລື່ອງ.”
[71]ເມື່ອລາວຍ່າງອອກໄປປະຕູບ້ານ ມີຍິງໃຊ້ອີກຄົນຫນຶ່ງຫລຽວເຫັນ ຈຶ່ງກ່າວແກ່ຄົນທັງຫລາຍທີ່ຢູ່ທີ່ນັ້ນວ່າ, “ຄົນນີ້ແຫລະ, ເຄີຍຢູ່ກັບເຢຊູໄທນາ-
ຊາເຣັດ.”[72]ເປໂຕໄດ້ປະຕິເສດທັງສາບານວ່າ, “ຂ້ອຍບໍ່ຮູ້ຈັກຊາຍຄົນນັ້ນ!”
[73]ຫລັງຈາກນັ້ນຫນ້ອຍຫນຶ່ງ ຄົນທັງຫລາຍທີ່ຢືນຢູ່ໃກ້ໆກັນນັ້ນກໍມາເວົ້າກັບເປ-
ໂຕວ່າ, “ແມ່ນແລ້ວ, ເຈົ້າເປັນຄົນຫນຶ່ງໃນພວກນັ້ນແທ້ ດ້ວຍວ່າສຳນຽງຂອງເຈົ້າກໍສໍ່ໃຫ້ຮູ້ໂຕເອງ.”[74]ຈາກນັ້ນເປໂຕກໍຕັ້ງຕົ້ນປ້ອຍດ່າ ແລະ ສາ-
ບານວ່າ, “ເຮົາບໍ່ຮູ້ຈັກຄົນນັ້ນ, ” ແລະ ໃນທັນໃດນັ້ນໄກ່ກໍຂັນ.[75]ເປໂຕຈຶ່ງໄດ້ຣະນຶກເຖິງຄຳທີ່ພຣະເຢຊູຊົງກ່າວໄວ້ວ່າ, “ກ່ອນໄກ່ຂັນ ທ່ານຈະປະ-
ຕິເສດເຮົາເຖິງສາມເທື່ອ,” ແລ້ວເປໂຕກໍອອກໄປຂ້າງນອກຮ້ອງໄຫ້ຂົມຂື່ນເປັນທຸກຫນັກໃຈ.

 generated on Tue Jun 17 19:01:42 2025

27 1ເມື່ອຮຸ່ງເຊົ້າມາ, ພວກຫົວຫນ້າປະໂລຫິດທັງຫມົດ ແລະ ພວກຜູ້ອາວຸໂສຂອງພົນລະເມືອງທັງຫມົດ ໄດ້ປຶກສາກັນຕໍ່ສູ້ພຣະ-
ເຢຊູເຈົ້າເພື່ອຈະປະຫານຊີວິດພຣະອົງ. 2ພວກເຂົາໄດ້ມັດພຣະອົງ, ແລະ ພາໄປມອບໃຫ້ປີລາດຜູ້ປົກຄອງ.

3ຫລັງຈາກນັ້ນຢູດາ, ຜູ້ທໍຣະຍົດຕໍ່ພຣະອົງນັ້ນ, ເມື່ອໄດ້ເຫັນວ່າພຣະອົງຕ້ອງຖືກໂທດ, ເຂົາກໍກິນແຫນງໄດ້ກັບໃຈ ແລະ
ຈຶ່ງໄດ້ນໍາເອົາເງິນສາມສິບຫລຽນນັ້ນມາສົ່ງຄືນໃຫ້ແກ່ພວກປະໂລຫິດ ແລະ ພວກຜູ້ອາວຸໂສ, 4ແລະ ໄດ້ເວົ້າວ່າ, “ຂ້ານ້ອຍຜິດບາບແລ້ວ
ເພາະໄດ້ມອບຜູ້ບໍ່ມີຄວາມຜິດໃຫ້ເຖິງຄວາມຕາຍ.” ແຕ່ຄົນເຫລົ່ານັ້ນຕອບວ່າ, “ການນັ້ນແມ່ນທຸລະອັນໃດກັບພວກເຮົາ? ໃຫ້ເປັນທຸ-
ລະຂອງເຈົ້າເອງ.” 5ແລ້ວຢູດາຈຶ່ງໂຍນຖິ້ມເງິນໄວ້ໃນພຣະວິຫານ, ແລະ ຈາກໄປແລ້ວອອກໄປຜູກຄໍຕົວເອງຕາຍເສັຽ.
6ບັນດາຫົວຫນ້າປະໂລຫິດຈຶ່ງເກັບເອົາເງິນນັ້ນໄວ້ແລ້ວເວົ້າວ່າ, “ເປັນການຜິດກົດບັນຍັດທີ່ຈະເກັບເງິນນັ້ນໄວ້ໃນຄັງພຣະວິຫານ,
ເພາະເປັນຄ່າເລືອດ.” 7ພວກເຂົາໄດ້ປຶກສາຕົກລົງກັນ ແລ້ວຈຶ່ງໄດ້ເອົາເງິນນັ້ນໄປຊື້ດິນຂອງຊ່າງປັ້ນຫມໍ້. 8ເພື່ອໃຫ້ເປັນບ່ອນຝັງສົບຄົນຕ່າງດ້າວ.
ເພາະສັນນັ້ນເຂົາຈຶ່ງເອີ້ນທີ່ດິນນັ້ນວ່າ "ດິນເລືອດ" ຈົນເຖິງທຸກວັນນີ້.
9ເມື່ອນັ້ນກໍສໍາເລັດຕາມພຣະທັມທີ່ຊົງບອກໄວ້ ໂດຍເຢເຣມີຢາຜູ້ປະກາດພຣະທັມ, ທີ່ວ່າ, “ເຂົາໄດ້ຮັບເງິນສາມສິບຫລຽນ ຊຶ່ງເປັນລາຄາຜູ້ນັ້ນ
ທີ່ຄົນອິສະຣາເອນໄດ້ຕີລາຄາໄວ້, 10ແລະ ພວກເຂົາໄດ້ເອົາເງິນນັ້ນໄປເປັນຄ່າສໍາລັບນາຂອງຊ່າງປັ້ນຫມໍ້, ຕາມທີ່ອົງພຣະຜູ້ເປັນ-
ເຈົ້າໄດ້ຊົງສັ່ງຂ້າພຣະເຈົ້າໄວ້.”
11ເມື່ອພຣະເຢຊູຊົງຢືນຢູ່ຕໍ່ຫນ້າຜູ້ປົກຄອງ, ແລະ ຜູ້ປົກຄອງຈຶ່ງໄດ້ຖາມພຣະອົງວ່າ, “ເຈົ້າເປັນກະສັດຂອງຊາດຢິວບໍ?” ພຣະ-
ເຢຊູເຈົ້າຊົງຕອບວ່າ, “ຕາມທີ່ທ່ານເວົ້ານັ້ນແລ້ວ.” 12ແຕ່ເມື່ອພວກຫົວຫນ້າປະໂລຫິດ ແລະ ພວກຜູ້ອາວຸໂສ, ໄດ້ກ່າວໂທດໃສ່ພຣະອົງ, ພຣະ-
ອົງກໍບໍ່ໄດ້ຊົງຕອບປະການໃດ. 13ໃນເວລານັ້ນ ປີລາດຈຶ່ງກ່າວແກ່ພຣະອົງວ່າ, “ພວກເຂົາໃສ່ຮ້າຍຕໍ່ສູ້ທ່ານຫລາຍປະການ
ທ່ານບໍ່ໄດ້ຍິນບໍ?.” 14ແຕ່ພຣະເຢຊູເຈົ້າບໍ່ໄດ້ຊົງຕອບຈັກຄໍາ ຈົນຜູ້ປົກຄອງປະຫລາດໃຈຫລາຍ.
15ມີທໍານຽມທີ່ຜູ້ປົກຄອງຈະປ່ອຍນັກໂທດຄົນຫນຶ່ງ ຕາມທີ່ປະຊາຊົນຮ້ອງຂໍ. 16ໃນຄາວນັ້ນມີນັກໂທດຄົນຫນຶ່ງຜູ້ທີ່ພວກເຂົາຮູ້ຈັກທົ່ວໄປ ຊື່ບາຣາ-
ບາ.
17ດັ່ງນັ້ນເມື່ອປະຊາຊົນມາປະຊຸມກັນແລ້ວ ປີລາດໄດ້ຖາມເຂົາວ່າ, “ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ ປ່ອຍບາຣາບາ ຫລື ເຢ-
ຊູຜູ້ທີ່ຖືກເອີ້ນວ່າພຣະຄຣິດ?” 18ເພາະປີລາດຮູ້ຢູ່ວ່າພວກເຂົາໄດ້ມອບພຣະເຢຊູເຈົ້າໃຫ້ແກ່ລາວໄວ້ດ້ວຍຄວາມອິດສາ. 19ໃນຂະນະທີ່ປີ-
ລາດນັ່ງຢູ່ບ່ອນພິພາກສານັ້ນ, ພັນຣະຍາຂອງທ່ານໄດ້ໃຊ້ຄົນມາຮຽນວ່າ, “ຢ່າໄດ້ພົວພັນກັບເລື່ອງຄົນທີ່ບໍ່ມີຜິດນັ້ນ.
ດ້ວຍວ່າວັນນີ້ຂ້ານ້ອຍມີຄວາມທຸກໃຈຫລາຍຍ້ອນຂ້ານ້ອຍມີຄວາມຝັນກ່ຽວກັບຜູ້ນີ້.”
20ຂະນະນັ້ນຫົວຫນ້າພວກປະໂລຫິດ ແລະ ພວກອາວຸໂສໄດ້ ປຸກລະດົມໃຫ້ປະຊາຊົນຮ້ອງຂໍໃຫ້ປ່ອຍບາຣາບາ, ແລະ ໃຫ້ຂ້າພຣະເຢຊູເຈົ້າເສັຽ.
21ແລ້ວຜູ້ປົກຄອງຈຶ່ງຖາມເຂົາອີກວ່າ, “ໃນສອງຄົນນີ້ພວກເຈົ້າຢາກໃຫ້ເຮົາປ່ອຍຜູ້ໃດ?” ເຂົາຕອບວ່າ, “ບາຣາ-
ບາ.” 22ແລ້ວປີລາດຈຶ່ງກ່າວກັບເຂົາວ່າ, “ຖ້າຢ່າງນັ້ນ, ເຮົາຈະເຮັດຢ່າງໃດ ແກ່ເຢຊູຜູ້ເອີ້ນວ່າພຣະຄຣິດ?” ພວກເຂົາພາກັນຕອບວ່າ,
“ໃຫ້ຄຶງເຂົາທີ່ໄມ້ກາງແຂນ.”
23ແລ້ວປີລາດຈຶ່ງເວົ້າວ່າ, “ເປັນຫຍັງ, ຄົນນີ້ໄດ້ເຮັດຜິດອັນໃດ?” ແຕ່ພວກເຂົາກໍພາກັນຮ້ອງຂຶ້ນຕື່ມວ່າ,
“ໃຫ້ຄຶງເຂົາເສັຽທີ່ໄມ້ກາງແຂນ.” 24ດັ່ງນັ້ນ ເມື່ອປີລາດໄດ້ເຫັນວ່າຕົນເອງບໍ່ສາມາດເຮັດສິ່ງໃດໄດ້, ມີແຕ່ຈະເກີດການວຸ້ນວາຍຂຶ້ນ,
ທ່ານຈຶ່ງໄດ້ເອົານ້ໍາມາລ້າງມືຕໍ່ຫນ້າປະຊາຊົນ ແລະ ໄດ້ກ່າວວ່າ, “ເຮົາບໍ່ມີຄວາມຜິດໃນເລື່ອງການຕາຍ ຂອງຜູ້ນີ້. ໃຫ້ເປັນທຸ-
ຣະຂອງພວກເຈົ້າເອງສາ.”
25ປະຊາຊົນພາກັນຕອບວ່າ, “ໃຫ້ໂທດເລື່ອງຄວາມຕາຍຂອງມັນຕົກໃສ່ພວກເຮົາ ແລະ
ລູກຫລານຂອງພວກເຮົາ.” 26ຈາກນັ້ນປີລາດຈຶ່ງປ່ອຍບາຣາບາໃຫ້ເຂົາ ແລະ ເມື່ອໃຫ້ຂ້ຽນພຣະເຢຊູເຈົ້າແລ້ວ ກໍມອບໃຫ້ຄຶງໄວ້ທີ່ໄມ້ກາງແຂນ.
27ແລ້ວພວກທະຫານຂອງຜູ້ປົກຄອງໄດ້ພາພຣະເຢຊູເຈົ້າເຂົ້າໄປໃນເດີ່ນບ້ານຂອງຜູ້ປົກຄອງ ແລະ ໄດ້ຮວບຮວມທະຫານທັງກອງມາອ້ອມພຣະ-
ອົງໄວ້. 28ພວກເຂົາໄດ້ແກ້ເຄື່ອງທົງຂອງພຣະອົງອອກ ແລ້ວເອົາເສື້ອສີແດງສົດມານຸ່ງໃຫ້ພຣະອົງ.
29ພວກເຂົາໄດ້ເອົາມົງກຸດຫນາມມາສຸບໃສ່ຫົວຂອງພຣະອົງ, ແລ້ວເອົາໄມ້ອໍ້ໃຫ້ພຣະອົງຖືໄວ້ໃນພຣະຫັດເບື້ອງຂວາ ແລະ ຄຸເຂົ່າລົງຕໍ່ພຣະ-
ພັກພຣະອົງ, ກ່າວຄໍາເຍາະເຍີ້ຍພຣະອົງວ່າ, “ກະສັດຂອງຊາດຢິວເອີຍ, ຂໍຊົງພຣະຈະເຣີນເຖີ້ນ!”
30ພວກເຂົາໄດ້ຖົ່ມນ້ໍາລາຍໃສ່ພຣະອົງ ແລະ ໄດ້ເອົາໄມ້ອໍ້ນັ້ນຕີຫົວພຣະອົງຫລາຍຄັ້ງຕີແລ້ວຕີອີກ. 31ເມື່ອພວກເຂົາເຍາະເຍີ້ຍພຣະອົງແລ້ວ,
ພວກເຂົາໄດ້ຖອດເຄື່ອງອອກຈາກພຣະອົງ ແລະ ເອົາເຄື່ອງຂອງພຣະອົງເອງມານຸ່ງໃຫ້ ແລະ ໄດ້ນໍາພຣະອົງອອກໄປເພື່ອຄຶງໄວ້ທີ່ໄມ້ກາງແຂນ.
32ຂະນະທີ່ພວກເຂົາໄດ້ອອກໄປນັ້ນ, ພວກເຂົາໄດ້ພົບຊາຍຄົນຫນຶ່ງທີ່ຊື່ຊີໂມນມາຈາກໄທກີເຣເນ, ຈຶ່ງເກນຄົນນັ້ນໃຫ້ແບກໄມ້ກາງແຂນຂອງພຣະ-
ອົງໄປ. 33ເມື່ອມາເຖິງບ່ອນຫນຶ່ງເອີ້ນວ່າໂຄລະໂຄທາ ທີ່ແປວ່າ "ກະໂຫລກຫົວ." 34ພວກເຂົາໄດ້ເອົາເຫລົ້າແວງປະສົມກັບນ້ໍາບີມາໃຫ້ພຣະອົງດື່ມ.
ແຕ່ເມື່ອຊົງຊີມແລ້ວ, ພຣະອົງບໍ່ຊົງຍອມດື່ມ.
35ເມື່ອພວກເຂົາໄດ້ຄຶງພຣະອົງທີ່ໄມ້ກາງແຂນແລ້ວ, ພວກເຂົາກໍເອົາເຄື່ອງຂອງພຣະອົງມາຈົກສະຫລາກແບ່ງປັນກັນ.
36ແລ້ວກໍພາກັນນັ່ງເຝົ້າພຣະອົງຢູ່ທີ່ນັ້ນ. 37ພວກເຂົາຕິດປ້າຍທີ່ມີຂໍ້ຄວາມກ່າວໂທດຕິດໄວ້ເຫນືອຫົວຂອງພຣະອົງ ຊຶ່ງອ່ານວ່າ, “ຜູ້ນີ້ຄືເຢຊູກະ-
ສັດຂອງຊາດຢິວ.”
38ມີໂຈນສອງຄົນຖືກຄຶງກາງແຂນພ້ອມກັບພຣະອົງ, ທີ່ເບື້ອງຂວາຄົນຫນຶ່ງ ແລະ ເບື້ອງຊ້າຍຄົນຫນຶ່ງ. 39ຝ່າຍຄົນທັງປວງທີ່ຍ່າງຜ່ານໄປມານັ້ນ,
ກໍຫມິ່ນປະຫມາດພຣະອົງ ແລະ ແກວ່ງຫົວເຍາະເຍີ້ຍພຣະອົງ, ແລະ ກ່າວວ່າ, 40ແລະ ສ້າງຂຶ້ນໃຫມ່ໃນສາມວັນເອີຍ,
ຈົ່ງຊ່ວຍຕົວເອງໃຫ້ພົ້ນແມ!, ຖ້າເຈົ້າເປັນບຸດຂອງພຣະເຈົ້າ, ກໍ ຈົ່ງລົງມາຈາກໄມ້ກາງແຂນສະ!”
41ໃນທໍານອງດຽວກັນນັ້ນພວກຫົວໜ້າປະໂລຫິດ ກັບພວກນັກທັມ ແລະພວກຜູ້ອາວຸໂສກໍໄດ້ເຍາະເຍີ້ຍພຣະອົງວ່າ, 42“ມັນຊ່ວຍຄົນອື່ນໃຫ້ພົ້ນໄດ້,
ແຕ່ຊ່ວຍຕົວເອງບໍ່ໄດ້. ມັນເປັນກະສັດອິສະຣາເອນ. ໃຫ້ມັນລົງມາຈາກໄມ້ກາງແຂນດຽວນີ້ແມ, ແລ້ວພວກເຮົາຈະໄດ້ເຊື່ອຖືມັນ.
43ທ່ານໄດ້ວາງໃຈໃນພຣະເຈົ້າ, ຖ້າພຣະເຈົ້າຊົງພໍພຣະທັຍໃນທ່ານ, ກໍໃຫ້ພຣະເຈົ້າໂຜດໃຫ້ທ່ານພົ້ນໄດ້ໃນບັດນີ້. ເພາະທ່ານໄດ້ເວົ້າວ່າ
‘ເຮົາເປັນບຸດຂອງພຣະເຈົ້າ’.” 44ຢ່າງດຽວກັນນັ້ນ ພວກໂຈນຜູ້ຖືກຄຶງໄວ້ພ້ອມກັນກັບພຣະອົງກໍໄດ້ກ່າວຄໍາຫຍາບຊ້າຕໍ່ພຣະອົງເຫມືອນກັນ.

 generated on Tue Jun 17 19:01:42 2025

[45]ໃນເວລານັ້ນ ໄດ້ເກີດການມືດມົວປົກຄຸມທົ່ວແຜ່ນດິນຕັ້ງແຕ່ທ່ຽງຈົນຮອດບ່າຍສາມໂມງ.[46]ພໍຮອດເວລາປະມານບ່າຍສາມໂມງພຣະ-
ເຢຊູຊົງຮ້ອງສຽງດັງວ່າ, “ເອລີ ເອລີ ແລມາ ຊາບັກທານີ” ເຊິ່ງມີຄວາມຫມາຍວ່າ, “ພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ,
ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສັຽ?”[47]ເມື່ອບາງຄົນທີ່ຢືນຢູ່ນັ້ນເມື່ອໄດ້ຍິນກໍເວົ້າວ່າ, “ຄົນຜູ້ນີ້ເອີ້ນຫາອາລີຢາ.”
[48]ໃນທັນໃດນັ້ນມີຜູ້ຫນຶ່ງໃນພວກເຂົາແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າແວງສົ້ມໃຫ້ເຕັມ. ແລ້ວສຽບໃສ່ປາຍໄມ້ອໍ້ ແລະ ຍື່ນໃຫ້ພຣະອົງກິນ.
[49]ແຕ່ຄົນອື່ນເວົ້າວ່າ, “ຢ່າໄປຫຍຸ້ງກັບມັນເລີຍ, ຖ້າເບິ່ງກ່ອນວ່າເອລີ-
ຢາຈະມາຊ່ອຍມັນໃຫ້ພົ້ນຫລືບໍ່?”[50]ຈາກນັ້ນພຣະເຢຊູເຈົ້າກໍຊົງຮ້ອງສຽງດັງຂຶ້ນອີກຄັ້ງດ້ວຍສຽງດັງ ແລ້ວຊົງສິ້ນລົມຫາຍໃຈ.
[51]ເບິ່ງແມ, ຜ້າກັ້ງໃນພຣະວິຫານກໍຊົງຖືກຈີກໄປເປັນສອງຕ່ອນ ຕັ້ງແຕ່ເທິງລົງເຖິງລຸ່ມ, ແລະ ແຜ່ນດິນກໍສະທ້ານຫວັ່ນໄຫວ, ແລະ
ສີລາກໍແຕກອອກຈາກກັນ.[52]ອຸບໂມງຝັງສົບກໍໄຂອອກ ສົບພວກໄພ່ພົນຂອງພຣະເຈົ້າຫລາຍຄົນທີ່ລ່ວງລັບໄປແລ້ວກໍເປັນຄືນມາ.[53]ພວກເຂົາທັງ-
ຫລາຍຈຶ່ງພາກັນອອກຈາກອຸບໂມງ ແລະ ເມື່ອພຣະເຢຊູຊົງເປັນຄືນມາ ແລ້ວກໍໄດ້ເຂົ້າໄປໃນນະຄອນສັກສິດປະກົດຕົວໃຫ້ຫລາຍຄົນເຫັນ.
[54]ໃນເວລານັ້ນ ເມື່ອນາຍຮ້ອຍ ແລະ ທະຫານທີ່ເຝົ້າພຣະສົບພຣະເຢຊູຢູ່ນຳກັນ ເມື່ອໄດ້ເຫັນແຜ່ນດິນຫວັ່ນໄຫວ ແລະ
ເຫດການທັງປວງທີ່ເກີດຂຶ້ນນັ້ນ, ກໍພາກັນຢ້ານຫລາຍຈຶ່ງເວົ້າກັນວ່າ, “ຈິງແທ້ແລ້ວ, ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ.”[55]ຢູ່ທີ່ນັ້ນມີຜູ້-
ຍິງຫລາຍຄົນຄອຍເບິ່ງແຕ່ຫ່າງໄກ ຄືພວກຍິງທີ່ໄດ້ຕິດຕາມ ແລະປົວລະບັດພຣະເຢຊູຕັ້ງແຕ່ແຂວງຄາລີເລມາ.[56]ໃນພວກນັ້ນມີມາຣີ-
ອາໄທມັກດາລາ, ມາຣີອາມານດາຂອງຢາໂກໂບ ແລະ ໂຢເຊັບກັບມານດາຂອງລູກຊາຍຂອງເຊເບດາຍ.
[57]ເມື່ອເຖິງເວລາຄໍ່າ, ມີເສດຖີຄົນຫນຶ່ງ ເຊິ່ງມາຈາກອາຣີມາທາຍ ຊື່ໂຢເຊັບ, ຜູ້ເປັນລູກສິດຄົນຫນຶ່ງຂອງພຣະເຢຊູເຫມືອນກັນ.
[58]ທ່ານຜູ້ນີ້ໄດ້ໄປຫາປີລາດຂໍເອົາພຣະສົບພຣະເຢຊູເຈົ້າ. ແລ້ວປີລາດຈຶ່ງຊົງໃຫ້ມອບພຣະສົບນັ້ນແກ່ເພິ່ນ.
[59]ໂຢເຊັບໄດ້ນຳເອົາພຣະສົບ, ແລະ ຫຸ້ມຫໍ່ພຣະສົບໄວ້ດ້ວຍຜ້າປ່ານສະອາດ,[60]ແລະ ນຳພຣະສົບໄປບັນຈຸວາງໃນອຸບໂມງໃຫມ່ຂອງຕົນ
ຊຶ່ງທ່ານໄດ້ສະກັດໄວ້ໃນຫີນ. ແລະ ທ່ານກິ້ງຫີນໃຫຍ່ກ້ອນຫນຶ່ງອັດປາກອຸບໂມງໄວ້ແລ້ວກໍຈາກຫນີໄປ.[61]ມາຣີ ຊາວມັກດາລາ ແລະ ມາຣີ-
ອາອີກຄົນຫນຶ່ງນັ້ນກໍຢູ່ທີ່ນັ້ນ ພວກເຂົານັ່ງຢູ່ຕໍ່ຫນ້າອຸບໂມງນັ້ນ.
[62]ພໍຮຸ່ງເຊົ້າຂຶ້ນໃນວັນຕໍ່ມາ, ເຊິ່ງເປັນວັນຖັດຈາກວັນຈັດແຈ່ງ, ພວກຫົວໜ້າປະໂລຫິດ ແລະ ພວກຟາຣີຊາຍໄດ້ພາກັນໄປຫາປີລາດ.
[63]“ທ່ານຜູ້ປົກຄອງທີ່ນັບຖື, ພວກຜູ້ຂ້າຈື່ຈຳໄດ້ວ່າຄົນຫລອກລວງຜູ້ນັ້ນ ເມື່ອຍັງມີຊີວິດຢູ່ ມັນໄດ້ເວົ້າວ່າ ‘ພາຍ-
ຫລັງສາມວັນແລ້ວເຮົາຈະເປັນຄືນມາໃຫມ່’.[64]ເຫດສັນນັ້ນຂໍທ່ານບັນຊາສັ່ງການເພື່ອໃຫ້ມີການເຝົ້າອຸບໂມງຝັງສົບ ໄວ້ຢ່າງແຂງ-
ແຮງຈົນເຖິງວັນຖ້ວນສາມ, ເພາະຢ້ານວ່າພວກສາວົກຂອງມັນຈະມາລັກເອົາສົບໄປແລ້ວຈະກ່າວຕໍ່ພົນລະເມືອງວ່າ,
‘ເພິ່ນເປັນຄືນມາຈາກຕາຍແລ້ວ’, ແລະ ການຫລອກລວງຄັ້ງສຸດທ້າຍນີ້ຈະຮ້າຍແຮງກວ່າຄັ້ງກ່ອນ.”
[65]ປີລາດໄດ້ບອກກັບພວກເຂົາວ່າ, “ເອົາຄົນຍາມໄປເຖີດ ແລະ ຈົ່ງເຝົ້າໃຫ້ປອດພັຍເທົ່າທີ່ທ່ານຈະເຮັດໄດ້.”[66]ແລະ
ເຝົ້າອຸບໂມງຝັງສົບນັ້ນຢ່າງຄັກແນ່, ປະທັບຕາໃສ່ຫີນໄວ້ ແລະ ຕັ້ງທະຫານຍາມໃຫ້ເຝົ້າຢູ່.

 generated on Tue Jun 17 19:01:42 2025

28 1ບັດນີ້ໃນວັນສະບາໂຕ, ເວລາໃກ້ຮຸ່ງເຊົ້າວັນຕົ້ນສັບປະດາ, ມາຣີອາ ໄທມັກດາລາ ແລະ ມາຣີອາອີກຄົນຫນຶ່ງກໍໄດ້ພາ-
ກັນໄປເບິ່ງອຸບໂມງຝັງສົບ.2ເບິ່ງແມ, ໄດ້ເກີດແຜ່ນດິນຫວັ່ນໄຫວຢ່າງຫນັກ, ດ້ວຍວ່າມີທູດສະຫວັນຕົນຫນຶ່ງຂອງອົງພຣະຜູ້ເປັນ-
ເຈົ້າລົງມາຈາກສະຫວັນ ແລະ ໄດ້ກິ້ງກ້ອນຫີນອອກ, ແລ້ວກໍນັ່ງເທິງຫີນນັ້ນ.

3ໃບຫນ້າຂອງເພິ່ນນັ້ນເຫມືອນແສງຟ້າແມບ, ແລະ ເຄື່ອງນຸ່ງກໍຂາວເຫມືອນຫິມະ.4ແລະ ກາຍເປັນເຫມືອນຄົນຕາຍ.
5ທູດສະຫວັນຕົນນັ້ນໄດ້ກ່າວແກ່ພວກຜູ້ຍິງວ່າ, “ຢ່າຢ້ານເລີຍ ດ້ວຍວ່າເຮົາຮູ້ແລ້ວວ່າພວກເຈົ້າມາຊອກຫາພຣະເຢຊູເຈົ້າ,
ຜູ້ທີ່ຖືກຄຶງໄວ້ທີ່ໄມ້ກາງແຂນ.6ແຕ່ຖືກຊົງບັນດານໃຫ້ເປັນຄືນມາ, ຕາມທີ່ພຣະອົງໄດ້ຊົງກ່າວແລ້ວ. ຈົ່ງມາເບິ່ງບ່ອນທີ່ພຣະອົງໄດ້ບັນທົມຢູ່ນັ້ນ.
7‘ພຣະອົງຖືກຊົງບັນດານໃຫ້ເປັນຄືນມາຈາກຄວາມຕາຍແລ້ວ, ເບິ່ງແມ, ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນທ່ານທັງຫລາຍ.
ພວກທ່ານຈະໄດ້ເຫັນພຣະອົງຢູ່ທີ່ນັ້ນ,’ ນີ້ແຫລະ, ເຮົາໄດ້ບອກພວກເຈົ້າແລ້ວ.”
8ພວກຜູ້ຍິງເຫລົ່ານັ້ນກໍຮີບແລ່ນອອກຈາກອຸບໂມງຝັງສົບຢ່າງໄວ ດ້ວຍທັງຢ້ານທັງຍິນດີຫລາຍ, ແລະ ໄດ້ແລ່ນໄປບອກພວກສາວົກຂອງພຣະອົງ.
9ພຣະເຢຊູໄດ້ສະເດັດມາພົບເຂົາ ແລະ ໄດ້ຊົງກ່າວວ່າ, “ສັນຕິສຸກຈົ່ງມີແກ່ພວກເຈົ້າເຖີ້ນ” ຍິງເຫລົ່ານັ້ນກໍເຂົ້າມາຈັບພຣະບາດນະມັດສະ-
ການພຣະອົງ.10“ຢ່າຊູ່ຢ້ານ ຈົ່ງໄປບອກພວກພີ່ນ້ອງຂອງເຮົາ ໃຫ້ໄປຍັງແຂວງຄາລີເລ. ແລ້ວພວກເຂົາໄດ້ເຫັນເຮົາທີ່ນັ້ນ.”
11ບັດນີ້ໃນຂະນະທີ່ພວກຜູ້ຍິງເຫລົ່ານັ້ນກຳລັງໄປ, ເບິ່ງແມ, ມີຜູ້ເຝົ້າຍາມບາງຄົນໄດ້ເຂົ້າໄປໃນເມືອງ ແລະ ໄດ້ເລົ່າເຫດ-
ການທັງປວງທີ່ເກີດຂຶ້ນນັ້ນ ໃຫ້ພວກຫົວໜ້າປະໂລຫິດຂອງຕົນຟັງ.12ແລະ ພວກຜູ້ອາວຸໂສໄດ້ພົບ ປະຊຸມປຶກສາກັນເຖິງເລື່ອງທີ່ເກີດຂຶ້ນນັ້ນ,
ພວກເຂົາກໍເອົາເງິນຈຳນວນຫລາຍແຈກໃຫ້ພວກທະຫານເຫລົ່ານັ້ນ,13ແລະ ສັ່ງພວກທະຫານວ່າ, “ໃຫ້ພວກເຈົ້າເວົ້າວ່າ ‘ພວກສາວົກຂອງ
'ພຣະເຢຊູ' ໄດ້ມາໃນເວລາກາງຄືນ ແລະ ໄດ້ລັກເອົາສົບໄປເວລາຫມູ່ເຮົານອນຫລັບຢູ່.
14ຖ້າເລື່ອງນີ້ຮູ້ໄປເຖິງຜູ້ປົກຄອງແລ້ວ, ພວກເຮົາຈະເວົ້າແກ້ຕົວໃຫ້ທ່ານເອງ ແລະ ບໍ່ໃຫ້ພວກເຈົ້າຕ້ອງກັງວົນ-
ໃຈ.”15ດັ່ງນັ້ນບັນດາທະຫານຈຶ່ງໄດ້ຮັບເງິນແລະ ພວກເຂົາກໍພາກັນເຮັດຕາມຄຳແນະນຳນັ້ນ. ຊຶ່ງເລື່ອງນີ້ໄດ້ຊ່າລືໄປໃນບັນດາພວກຢິວ ແລະ
ສືບເນື່ອງຈົນເຖິງທຸກວັນນີ້.
16ແຕ່ພວກສາວົກສິບເອັດຄົນໄດ້ໄປຍັງແຂວງຄາລີເລ, ໄປເຖິງພູທີ່ພຣະເຢຊູເຈົ້າໄດ້ຊົງນຳພາກຳນົດໄວ້ກັບເຂົາ.17ເມື່ອພວກເຂົາເຫັນພຣະອົງແລ້ວ,
ພວກເຂົາຈຶ່ງນະມັດສະການພຣະອົງ, ແຕ່ບາງຄົນກໍຍັງສົງໃສຢູ່.
18ພຣະເຢຊູເຈົ້າໄດ້ສະເດັດມາຫາພວກເຂົາ ແລະ ຊົງກ່າວກັບເຂົາວ່າ, “ສິດທິອຳນາດທັງຫມົດໃນສະຫວັນ ແລະ ທີ່ແຜ່ນ-
ດິນໂລກກໍໄດ້ຊົງມອບໃຫ້ແກ່ເຮົາແລ້ວ.19ພວກທ່ານຈົ່ງອອກໄປ ແລະ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ. ບັບຕິສະ-
ມາພວກເຂົາໃນພຣະນາມຂອງພຣະບິດາ, ຂອງພຣະບຸດ, ແລະ ຂອງພຣະວິນຍານບໍລິສຸດເຈົ້າ.
20ສັ່ງສອນພວກເຂົາໃຫ້ເຊື່ອຟັງສິ່ງສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ, ເບິ່ງແມ, ເຮົາຢູ່ກັບທ່ານທັງຫລາຍສະເຫມີໄປ,
ຈົນກວ່າຈະເຖິງວັນທີ່ສິ້ນໂລກ."

# ມາຣະໂກ

1 1ນີ້ແມ່ນ ຈຸດເລີ່ມຕົ້ນແຫ່ງຂ່າວປະເສີດ ເລື່ອງຂອງພຣະເຢຊູຄຣິດເຈົ້າ, ຜູ້ເປັນພຣະບຸດຂອງພຣະເຈົ້າ.2ຕາມທີ່ຜູ້ທຳນວາຍເອຊາຢາໄດ້
ຂຽນໄວ້ດັ່ງນີ້ວ່າ: “ເບິ່ງແມ, ເຮົາຈະໃຊ້ຜູ້ສື່ງຂ່າວສານຂອງເຮົາໄປລ່ວງຫນ້າທ່ານ,
ຜູ້ທີ່ຈະໄປຕຽມທາງໄວ້ໃຫ້ແກ່ທ່ານ.”3ສຽງຂອງຄົນຫນຶ່ງທີ່ຮ້ອງອອກໄປໃນຖິ່ນທຸຣະກັນດານວ່າ ‘ຈົ່ງຈັດຕຽມ
ຫົນທາງຂອງພຣະອົງພຣະຜູ້ເປັນເຈົ້າໃຫ້ພ້ອມ ແລະ ເຮັດໃຫ້ຊື່ໄປ.’”

4ສະນັ້ນໂຢຮັນໄດ້ມາ, ກຳລັງໃຫ້ບັບຕິສະມາ ຢູ່ໃນຖິ່ນແຫ້ງແລ້ງກັນດານ ແລະ ເທສະຫນາສັ່ງສອນໃນເລື່ອງການຮັບບັບຕິສະມາ
ດ້ວຍການສາລະພາບກັບໃຈ ເພື່ອຮັບການຍົກໂທດບາບ.”5ປະຊາຊົນຢ່າງຫລວງຫລາຍຈາກແຂວງຢູດາຍ
ແລະຈາກນະຄອນເຢຣູຊາເລັມໄດ້ອອກໄປຫາໂຢຮັນ, ຮັບບັບຕິສະມາທີ່ແມ່ນ້ຳຈໍແດນ ແລະ ສາລະພາບບາບຂອງຕົນເອງ.6ໂຢຮັນ,
ຜູ້ນີ້ໃສ່ເສື້ອທີ່ເຮັດດ້ວຍຂົນອູດ ແລະ ໃສ່ສາຍຫນັງຮັດແອວ, ແລະ ກິນຕັກກະແຕນ ກັບນ້ຳເຜິ້ງປ່າ ເປັນອາຫານ.
7ໂຢຮັນປະກາດວ່າ, "ຍັງຈະມີທ່ານອີກຜູ້ຫນຶ່ງທີ່ຈະມາພາຍຫລັງ ຂ້າພຣະເຈົ້າພຣະອົງຈະມີອຳນາດຍິ່ງໃຫຍ່ກວ່າຂ້າພຣະເຈົ້າ, ແລະ
ດ້ວຍຂ້າພຣະເຈົ້າ ບໍ່ສົມຄວນແມ່ນແຕ່ຈະກົ້ມລົງແກ້ສາຍຮັດເກີບຂອງພຣະອົງ.8ຂ້າພຣະເຈົ້າໃຫ້ບັບຕິສະມາທ່ານໃນນ້ຳ,
ແຕ່ພຣະອົງຜູ້ນີ້ຈະໃຫ້ທ່ານໄດ້ຮັບບັບຕິສະມາໃນພຣະວິນຍານບໍລິສຸດເຈົ້າ.”
9ຢູ່ມາມື້ຫນຶ່ງ ພຣະເຢຊູເຈົ້າໄດ້ມາຈາກເມືອງນາຊາເຣັດ ໃນແຂວງຄາລີເລ, ແລະ ພຣະອົງໄດ້ຮັບບັບຕິສະມາຈາກໂຢຮັນ ໃນແມ່ນ້ຳຈໍແດນ.
10ໃນເວລາທີ່ ພຣະເຢຊູຂຶ້ນຈາກນ້ຳ, ກໍເຫັນທ້ອງຟ້າແຍກອອກ ແລະ ມີພຣະວິນຍານເຫມືອນດັ່ງນົກກາງແກລົງມາຢູ່ເທິງພຣະອົງ.
11ແລ້ວໄດ້ມີສຽງຫນຶ່ງດັ່ງອອກມາຈາກສະຫວັນວ່າ, “ເຈົ້າເປັນບຸດທີ່ຮັກຂອງເຮົາ, ເຮົາພໍໃຈເຈົ້າຫລາຍ.”
12ແລ້ວພຣະວິນຍານ ກໍດົນໃຈພຣະອົງເຂົ້າໄປໃນຖິ່ນແຫ້ງແລ້ງທຸຣະກັນດານ,13ພຣະອົງຢູ່ທີ່ນັ້ນເປັນເວລາສີ່ສິບວັນ, ຖືກມານຊາຕານທົດລອງ.
ພຣະອົງຢູ່ ທ່າມກາງເຫລົ່າສັດຮ້າຍ, ແລະ ມີພວກທູດສະຫວັນຄອຍດູແລພຣະອົງ.
14ຫລັງຈາກທີ່ໂຢຮັນຖືກຄຸກ, ພຣະເຢຊູເຈົ້າກໍເຂົ້າໄປປະກາດຂ່າວປະເສີດຂອງພຣະເຈົ້າ ທີ່ແຂວງຄາລີເລ.15ພຣະອົງກ່າວວ່າ,
"ເວລາໄດ້ມາເຖິງແລ້ວ, ແລະ ອານາຈັກ ຂອງພຣະເຈົ້າກໍຢູ່ໃກ້ແລ້ວ. ຈົ່ງກັບໃຈໃຫມ່ ແລະ ເຊື່ອໃນຂ່າວປະເສີດເຖີ້ນ.”
16ຂະນະທີ່ ພຣະອົງກຳລັງຍ່າງຜ່ານມາທີ່ທະເລຄາລີເລນັ້ນ, ພຣະອົງໄດ້ເຫັນຊີໂມນ ແລະ ອັນເດອານ້ອງຊາຍຂອງເຂົາກຳລັງຢ່ອນມອງຢູ່ທະເລ,
ເພາະທັງສອງເປັນຄົນຫາປາ.17ພຣະເຢຊູເຈົ້າ ຊົງກ່າວວ່າ, “ມາ, ຈົ່ງຕາມເຮົາມາ, ແລ້ວເຮົາຈະໃຫ້ທ່ານເປັນຜູ້ຫາຄົນ.”18ທັງສອງກໍປະມອງ
ແລະ ເຮືອຂອງຕົນໄວ້ ແລ້ວຕິດຕາມ ພຣະເຢຊູເຈົ້າໄປທັນທີ.


generated on Tue Jun 17 19:01:42 2025

[19]ເມື່ອພຣະເຢຊູເຈົ້າເດີນຕໍ່ໄປອີກໜ້ອຍໜຶ່ງພຣະອົງກໍເຫັນຢາໂກໂບລູກຊາຍຂອງເຊເບດາຍແລະໂຢຮັນ ນ້ອງຊາຍຂອງເຂົາ
ສອງຄົນນີ້ກຳລັງແປງມອງຂອງຕົນຢູ່ໃນເຮືອ.[20]ພຣະເຢຊູເຈົ້າຈຶ່ງເອີ້ນໃຫ້ທັງສອງ ຕິດຕາມພຣະອົງ ທັງສອງຈຶ່ງປະພໍ່ຂອງຕົນ ຄື ເຊເບດາຍ
ກັບລູກຈ້າງໄວ້ໃນເຮືອ ແລະ ຕິດຕາມພຣະອົງໄປ.
[21]ແລະພວກເພິ່ນພາກັນໄປທີ່ ເມືອງກາເປນາອູມ ແລະໃນວັນສະບາໂຕ ພຣະເຢຊູເຈົ້າໄດ້ເຂົ້າໄປໃນ ທັມະສາລາ ແລະ
ພຣະອົງໄດ້ຕັ້ງຕົ້ນສັ່ງສອນຢູ່ທີ່ນັ້ນ.[22]ຜູ້ຄົນປະຫລາດໃຈໃນຄຳສອນຂອງພຣະເຢຊູເຈົ້າ, ເພາະພຣະອົງ ບໍ່ໄດ້ສອນເຫມືອນພວກທັມະຈານ ແລະ
ແຕ່ເປັນຢ່າງຜູ້ມີສິດອຳນາດ.
[23]ໃນເວລານັ້ນ ມີຊາຍຄົນໜຶ່ງໃນທັມະສາລາ ທີ່ມີຜີຊົ່ວຮ້າຍສິງຢູ່ ແລະ ຮ້ອງຂຶ້ນວ່າ,[24]“ພຣະເຢຊູໄທນາຊາເຣັດເອີຍ
ພຣະອົງມາຫຍຸ້ງກ່ຽວນຳພວກເຮົາເຮັດຫຍັງ? ພຣະອົງມາທີ່ນີ້ ເພື່ອທຳລາຍພວກເຮົາບໍ? ພວກເຮົາຮູ້ແລ້ວວ່າພຣະອົງເປັນຜູ້ໃດ.
ພຣະອົງກໍເປັນຜູ້ບໍຣິສຸດຂອງພຣະເຈົ້າ!”[25]ພຣະເຢຊູເຈົ້າ ສັ່ງຫ້າມຜີຊົ່ວຮ້າຍ ນັ້ນວ່າ, “ມິດແມ ແລະ
ອອກຈາກຊາຍຄົນນີ້ສາ!”[26]ວິນຍານຮ້າຍນັ້ນໄດ້ເຮັດໃຫ້ລາວຊັກດິ້ນຢ່າງແຮງ ແລະ ມັນກໍອອກຈາກຮ່າງຂອງເຂົາ ດ້ວຍສຽງຮ້ອງດັງ.
[27]ຄົນທັງຫລາຍກໍງຶດປະຫລາດໃຈ, ດັ່ງນັ້ນພວກເຂົາຈຶ່ງຖາມກັນ ແລະ ກັນວ່າ, “ນີ້ແມ່ນຫຍັງ?
ຄຳສອນແບບໃຫມ່ຢ່າງມີສິດທິອຳນາດຢ່າງນັ້ນບໍ? ພຣະອົງສາມາດສັ່ງໃຫ້ວິນຍານຊົ່ວຮ້າຍອອກໄປ ແລະ
ມັນກໍຍອມຟັງພຣະອົງ!”[28]ແລ້ວຊື່ສຽງ ຂອງພຣະເຢຊູເຈົ້າ ຈຶ່ງຊ່າລືໄປທົ່ວທຸກທີ່ທຸກບ່ອນໃນແຂວງຄາລີເລ.
[29]ຫລັງຈາກທີ່ອອກມາຈາກ ທັມະສາລາແລ້ວ, ພວກເຂົາກໍພາກັນໄປທີ່ເຮືອນຂອງຊີໂມນ ແລະ ອັນເດອາ, ໂດຍມີຢາໂກໂບ ແລະ ໂຢຮັນໄປນຳ.
[30]ເວລານັ້ນ ແມ່ເມັຽຂອງຊີໂມນ ກຳລັງນອນປ່ວຍດ້ວຍໄຂ້ສູງ, ແລະ ພວກເຂົາຈຶ່ງບອກເລື່ອງຂອງນາງກັບພຣະເຢຊູເຈົ້າ.
[31]ດັ່ງນັ້ນພຣະອົງຈຶ່ງໄປຫາ, ແລະ ຈັບມືນາງໃຫ້ລຸກຂຶ້ນ; ໃນທັນໃດນັ້ນໄຂ້ກໍຫາຍ, ແລະ ນາງກໍຄອຍບົວລະບັດຮັບໃຊ້ພຣະອົງ ແລະ ພວກ
ສາວົກ.
[32]ໃນຕອນຄ້າຍແລງ, ພໍຕາເວັນຕົກດິນ, ປະຊາຊົນກໍພາທຸກຄົນທີ່ເຈັບປ່ວຍທັງຫມົດ ແລະ ຄົນທີ່ຖືກຜີມານຮ້າຍສິງມາຫາພຣະເຢຊູເຈົ້າ.
[33]ປະຊາຊົນໃນເມືອງທັງຫມົດ ໄດ້ມາອັ່ງອໍໂຮມກັນຢູ່ປະຕູ.[34]ພຣະເຢຊູເຈົ້າ ໄດ້ຮັກສາຍປົ່ວຢາຄົນປ່ວຍຈຳນວນຫລວງຫລາຍ
ໃຫ້ຫາຍຈາກໂຣກພັຍຕ່າງໆ ແລະ ຂັບໄລ່ວິນຍານຜີມານຮ້າຍຈຳນວນຫລາຍອອກຈາກຄົນ, ແຕ່ພຣະອົງບໍ່ຊົງອະນຸຍາດໃຫ້ຜີຮ້າຍເວົ້າຫຍັງ
ເພາະພວກມັນຮູ້ວ່າພຣະອົງເປັນຜູ້ໃດ.
[35]ພຣະເຢຊູເຈົ້າຕື່ນແຕ່ເຊົ້າ, ຂະນະທີ່ຍັງມືດຢູ່; ພຣະເຢຊູເຈົ້າໄດ້ອອກຈາກບ້ານແລະໄປຍັງສະຖານທີ່ງຽບສະຫງັດແລ້ວອະທິຖານຢູ່ທີ່ນັ້ນ.
[36]ຊີໂມນກັບ ບັນດາຄົນທີ່ຢູ່ກັບເຂົາກໍພາກັນອອກໄປຊອກຫາພຣະອົງ,[37]ເມື່ອພວກເຂົາພົບພຣະອົງກໍເວົ້າວ່າ, “ທຸກຄົນກຳລັງຊອກຫາ ພຣະອົງຢູ່.”
[38]ພຣະເຢຊູເຈົ້າ ຕອບວ່າ, “ໃຫ້ພວກເຮົາ ໄປບ່ອນອື່ນໄປຍັງເມືອງທີ່ຢູ່ໃກ້ຄຽງເຖີດ, ເພື່ອວ່າເຮົາຈະໄດ້ປະກາດໃຫ້ແກ່ເຂົາ, ເພາະນີ້ຄືເຫດທີ່ເຮົາ
ໄດ້ອອກມາທີ່ນີ້.”[39]ພຣະອົງອອກໄປທົ່ວແຂວງຄາລີເລ, ເຂົ້າໄປສັ່ງສອນໃນທັມະສາລາ ແລະຂັບໄລ່ວິນຍານຊົ່ວຮ້າຍອອກຈາກຄົນ.
[40]ມີຊາຍທີ່ເປັນພະຍາດຂີ້ທູດຜູ້ຫນຶ່ງ ມາຫາພຣະເຢຊູເຈົ້າ, ລາວຄຸເຂົ່າລົງ ແລະ ຂໍກັບພຣະອົງວ່າ “ຖ້າຫາກພຣະອົງພໍໃຈ, ກໍຈະເຮັດໃຫ້
ຂ້ານ້ອຍສະອາດດີໄດ້.”[41]ພຣະເຢຊູເຈົ້າເກີດມີໃຈສົງສານ, ຈຶ່ງເດ່ມືອອກໄປແຕະຕ້ອງຕົວລາວ ແລະກ່າວວ່າ,“ເຮົາພໍໃຈໃຫ້ທ່ານຫາຍແລ້ວ
ຈົ່ງດີສະອາດສາ.”[42]ພະຍາດຂີ້ທູດກໍຫາຍໄປຈາກຊາຍຄົນນີ້, ແລະ ກາຍເປັນຄົນປົກກະຕິໃນທັນທີ.
[43]ພຣະເຢຊູເຈົ້າກຳຊັບເຂົາຢ່າງເຄັ່ງຄັດ ແລະບອກລາວໃຫ້ຫນີໄປ.[44]ພຣະອົງກ່າວກັບລາວວ່າ, “ຢ່າບອກເລື່ອງນີ້ສູ່ຜູ້ໃດຟັງເປັນອັນຂາດ,
ແຕ່ຈົ່ງໄປຫາປະໂລຫິດແລ້ວຖວາຍເຄື່ອງບູຊາຕາມທີ່ໂມເຊສັ່ງ, ເພື່ອເປັນພະຍານໃຫ້ກັບຄົນເຫລົ່ານັ້ນ”
[45]ແຕ່ເມື່ອຊາຍຄົນນີ້ອອກໄປແລ້ວນັ້ນກໍເລີ່ມປະກາດຂ່າວນີ້ໃຫ້ຄົນອື່ນຮູ້ຈົນພຣະເຢຊູເຈົ້າບໍ່ອາດ ເຂົ້າໃນເມືອງໄດ້ຢ່າງເປີດເຜີຍອີກຕໍ່ໄປ.
ດັ່ງນັ້ນພຣະອົງໄດ້ໄປອາສັຍຢູ່ໃນບ່ອນປ່ຽວ ແລ້ວກໍຍັງມີຄົນຈາກທຸກທີ່ທຸກບ່ອນມາຫາພຣະອົງ.

 generated on Tue Jun 17 19:01:42 2025

# 2

[1]ເມື່ອພຣະອົງໄດ້ກັບຄືນໄປກາເປນາອູມ ຫລັງຈາກນັ້ນບໍ່ເທົ່າໃດວັນ, ຄົນທັງຫລາຍ ໄດ້ຍິນວ່າພຣະອົງພັກຢູ່ທີ່ບ້ານ.
[2]ຄົນຢ່າງຫລວງຫລາຍຈຶ່ງມາຊຸມນຸມກັນຈົນບໍ່ມີບ່ອນຫວ່າງ, ແມ່ນແຕ່ທີ່ປະຕູ, ແລະ ພຣະເຢຊູເຈົ້າກໍ່ກ່າວພຣະທັມສູ່ພວກເຂົາຟັງ.

[3]ແລ້ວຊາຍບາງຄົນນຳຄົນທີ່ເປັນເປ້ຽມາຫາພຣະອົງ; ຊຶ່ງມີຄົນສີ່ຄົນກຳລັງຫາມຄົນເປ້ຽມາ.
[4]ເມື່ອພວກເຂົາບໍ່ສາມາດນຳຊາຍຄົນນັ້ນເຂົ້າໄປຫາພຣະອົງໄດ້ເນື່ອງຈາກມີປະຊາຊົນຫນ້າບຽດສຽດກັນຢູ່,
ພວກເຂົາຈຶ່ງຮື້ຫລັງຄາທີ່ຢູ່ຊື່ບ່ອນພຣະເຢຊູເຈົ້າກຳລັງນັ່ງຢູ່, ແລະ ແລ້ວພວກເຂົາກໍເຈາະຫລັງຄາເປັນປ່ອງແລ້ວ,
ພວກເຂົາກໍຢ່ອນຄົນເປ້ຽຢູ່ເທິງບ່ອນນອນຂອງລາວ ລົງມາ.
[5]ເມື່ອພຣະເຢຊູເຈົ້າເຫັນຄວາມເຊື່ອຂອງພວກເຂົາ, ພຣະອົງກໍ່ຊົງກ່າວແກ່ຄົນເປ້ຽນັ້ນວ່າ, “ລູກເອີຍ
ບາບຂອງເຈົ້າໄດ້ຮັບການອະພັຍແລ້ວ.”[6]ແຕ່ພວກທັມະຈານທີ່ນັ່ງໃນທີ່ນັ້ນກໍຄິດຢູ່ໃນໃຈວ່າ,[7]“ຊາຍຄົນນີ້ເວົ້າຢ່າງນີ້ໄດ້ຢ່າງໃດ?
ເຂົາກຳລັງເວົ້າຫມິ່ນປະຫມາດພຣະເຈົ້າ! ໃຜທີ່ສາມາດຍົກໂທດບາບໄດ້ນອກຈາກພຣະເຈົ້າພຽງຜູ້ດຽວ?”
[8]ທັນໃດນັ້ນ ພຣະເຢຊູເຈົ້າ ຮູ້ໃນພຣະວິນຍານວ່າ ພວກເຂົາກຳລັງຄິດໃນໃຈຫຍັງຢູ່.
ພຣະອົງຈຶ່ງກ່າວກັບພວກເຂົາວ່າ,“ເປັນຫຍັງພວກທ່ານຈຶ່ງຄິດເລື່ອງນີ້ຢູ່ໃນໃຈ?[9]ອັນໃດຈະງ່າຍກວ່າກັນທີ່ຈະບອກຄົນເປ້ຽນີ້ວ່າ,
‘ບາບຂອງເຈົ້າໄດ້ຮັບການອະພັຍແລ້ວ’ ຫລື ກ່າວວ່າ,‘ຈົ່ງລຸກຂຶ້ນເອົາບ່ອນນອນຂອງເຈົ້າ ແລະ ຍ່າງເມືອ?’
[10]ແຕ່ເພື່ອພວກທ່ານຈະຮູ້ວ່າ ບຸດມະນຸດມີອຳນາດທີ່ຈະຍົກໂທດຄວາມຜິດບາບຂອງມະນຸດໄດ້.” ພຣະອົງຈຶ່ງກ່າວແກ່ຄົນທີ່ເປັນເປ້ຽວ່າ,
[11]“ເຮົາສັ່ງເຈົ້າວ່າ, ຈົ່ງລຸກຂຶ້ນ, ຍົກເອົາບ່ອນນອນຂອງເຈົ້າ ແລະ ກັບໄປທີ່ບ້ານຂອງເຈົ້າ.”[12]ເຂົາກໍລຸກຂຶ້ນ ແລະ
ຍົກເອົາບ່ອນນອນຂອງຕົນໃນທັນທີ, ແລະ ກັບໄປບ້ານຕໍ່ຫນ້າຕໍ່ຕາທຸກຄົນ, ເຫດສະນັ້ນພວກເຂົາທຸກຄົນກໍງຶດປະຫລາດໃຈ ແລະ
ພວກເຂົາກໍສັນຣະເສີນພຣະສະຫງ່າຣາສີພຣະເຈົ້າ, ແລະ ພວກເຂົາບອກວ່າ, "ພວກເຮົາບໍ່ເຄີຍເຫັນເຫດການເຊັ່ນນີ້ເລີຍ."
[13]ພຣະເຢຊູເຈົ້າສະເດັດໄປທີ່ແຄມທະເລສາບອີກ, ປະຊາຊົນໄດ້ເຂົ້າມາຫາພຣະອົງ ແລະ ພຣະອົງໄດ້ສັ່ງສອນພວກເຂົາ.
[14]ຂະນະທີ່ພຣະອົງກຳລັງຍ່າງຜ່ານໄປນັ້ນ, ພຣະອົງກໍເຫັນເລວີລູກຊາຍຂອງອາລະຟາຍກຳລັງນັ່ງຢູ່ທີ່ດ່ານເກັບພາສີ,
ແລະພຣະອົງກ່າວກັບລາວວ່າ,“ຈົ່ງຕາມເຮົາມາ.” ເຂົາກໍລຸກຂຶ້ນແລະຕາມພຣະອົງໄປ.
[15]ຂະນະທີ່ພຣະເຢຊູເຈົ້າກຳລັງຮັບປະທານອາຫານທີ່ເຮືອນຂອງເລວີ. ມີຄົນເກັບພາສີ ແລະ
ຄົນບາບຈຳນວນຫລາຍກໍກຳລັງຮັບປະທານອາຫານຮ່ວມກັບພຣະເຢຊູເຈົ້າແລະ ສາວົກຂອງພຣະອົງ,
ເພາະພວກເຂົາມີຈຳນວນຫລາຍແລະພວກເຂົາໄດ້ຕິດຕາມພຣະອົງ.[16]ເມື່ອພວກທັມະຈານ,
ຊຶ່ງເປັນຝ່າຍຟາຣີຊາຍໄດ້ເຫັນພຣະເຢຊູເຈົ້າກຳລັງກິນເຂົ້າກັບຄົນບາບ ແລະ ຄົນເກັບພາສີ, ພວກເຂົາຈຶ່ງເວົ້າກັບພວກສາວົກຂອງພຣະອົງວ່າ,
“ເປັນຫຍັງເພິ່ນຈຶ່ງກິນເຂົ້າຮ່ວມກັບຄົນເກັບພາສີ ແລະ ຄົນບາບເຫລົ່ານີ້?”
[17]ເມື່ອພຣະເຢຊູເຈົ້າໄດ້ຍິນເຊັ່ນນີ້ ພຣະອົງຈຶ່ງຕອບພວກເຂົາວ່າ, “ຄົນທີ່ມີຮ່າງກາຍແຂງແຮງດີບໍ່ຕ້ອງການຫມໍ, ຄົນປ່ວຍເທົ່ານັ້ນທີ່ຕ້ອງການຫມໍ.
ເຮົາບໍ່ໄດ້ມາຫາຄົນທີ່ເອີ້ນວ່າເປັນຄົນຊອບທັມ, ແຕ່ມາເອີ້ນຄົນທີ່ເປັນຄົນບາບ”
[18]ໃນເວລານັ້ນສາວົກຂອງໂຢຮັນ ແລະ ພວກຟາຣີຊາຍ ກຳລັງຖືສິນອົດອາຫານ. ມີບາງຄົນມາ ແລະ ເວົ້າກັບພຣະອົງວ່າ,
“ເປັນຫຍັງສາວົກຂອງໂຢຮັນ ແລະສາວົກພວກຟາຣີຊາຍຖືສິນອົດອາຫານ, ສ່ວນສາວົກຂອງພຣະອົງຄືບໍ່ຖືສິນອົດອາຫານ?
[19]ພຣະເຢຊູເຈົ້າຕອບວ່າ, “ເພື່ອນຂອງເຈົ້າບ່າວຈະຖືສິນອົດອາຫານໃນຂະນະທີ່ເຈົ້າບ່າວ ຍັງຢູ່ນຳພວກເຂົາບໍ?
ຕາບເທົ່າທີ່ເຈົ້າບ່າວຍັງຢູ່ກັບພວກເຂົາ, ພວກເຂົາກໍບໍ່ຕ້ອງອົດອາຫານ.
[20]ແຕ່ເມື່ອເວລານັ້ນມາເຖິງເມື່ອເຈົ້າບ່າວຖືກຮັບໄປຈາກພວກເຂົາ,
ໃນເວລານັ້ນພວກເຂົາຈະຖືສິນອົດອາຫານ.”[21]ບໍ່ມີໃຜຫຍິບເສດຜ້າໃຫມ່ລົງເທິງເສື້ອຜ້າເກົ່າ,
ຊຶ່ງຈະເຮັດໃຫ້ຮອຍຕາບຂາດອອກຈາກເສື້ອຜ້າເກົ່າ ຜ້າໃຫມ່ຂາດອອກຈາກຜ້າເກົ່າ ແລະ ຮອຍຂາດຈະກ້ວາງຫລາຍຂຶ້ນ.
[22]ບໍ່ມີຜູ້ໃດໃສ່ເຫລົ້າອະງຸ່ນໃຫມ່ໄວ້ໃນຖົງຫນັງເກົ່າ, ເພາະການເຮັດຢ່າງນັ້ນຈະເປັນການເຮັດໃຫ້ຖົງຫນັງຂາດ ແລະ
ທັງເຫລົ້າອະງຸ່ນກໍຈະເສັ້ຽໄປແທນທີ່ຈະທຳເຊັ່ນນັ້ນ ຈົ່ງໃສ່ເຫລົ້າອະງຸ່ນໃຫມ່ໃນຖົງຫນັງໃຫມ່.”
[23]ໃນວັນສະບາໂຕ ພຣະເຢຊູເຈົ້າໄດ້ຍ່າງຜ່ານທົ່ງນາ ແລະ ພວກສາວົກເຫລົ່ານັ້ນກໍເດັດເອົາຮວງເຂົ້າມາກິນ.
[24]ພວກຟາຣີຊາຍຈຶ່ງເວົ້າຕໍ່ພຣະອົງວ່າ, “ເບິ່ງແມ "ເປັນຫຍັງ ພວກສາວົກຂອງທ່ານ ຈຶ່ງເຮັດສິ່ງທີ່ຜິດກົດບັນຍັດໃນວັນສະບາໂຕ?"
[25]ພຣະອົງ ຊົງຕອບພວກເຂົາວ່າ, "ທ່ານບໍ່ເຄີຍອ່ານກຽວກັບດາວິດໃນຄາວທີ່ທ່ານລຳບາກ ແລະ ຫິວ - ທັງທ່ານ ແລະ ຄົນຂອງທ່ານ ບໍ?.
[26]ດາວິດໄດ້ເຂົ້າໄປທີ່ສະຖິດຂອງພຣະເຈົ້າໃນເວລາທີ່ອາບີອາທາເປັນມະຫາປະໂລຫິດ ແລະ ກິນເຂົ້າຈີ່ ທີ່ໄດ້ຖວາຍແກ່ ພຣະເຈົ້າ,
ຊຶ່ງໃຜກໍຕາມທີ່ກິນເປັນການທຳຜິດກົດບັນຍັດນອກຈາກພວກປະໂລຫິດເທົ່ານັ້ນ, ແລະ
ທ່ານກໍຍັງໃຫ້ເຂົ້າຈີ່ເຫລົ່ານັ້ນແກ່ຄົນທີ່ມາກັບທ່ານກິນດ້ວຍໄດ້ຢ່າງໃດ?"
[27]ພຣະເຢຊູເຈົ້າກ່າວວ່າ, “ວັນສະບາໂຕໄດ້ສ້າງໄວ້ເພື່ອມະນຸດ, ບໍ່ໄດ້ສ້າງມະນຸດໄວ້ເພື່ອວັນສະບາໂຕ.[28]ເພາະເຫດນັ້ນ,
ບຸດມະນຸດຄືເຈົ້ານາຍເຫນືອວັນສະບາໂຕ.”


generated on Tue Jun 17 19:01:42 2025

3 [1]ພຣະເຢຊູເຈົ້າເຂົ້າໄປໃນທັມະສາລາອີກເທື່ອຫນຶ່ງ ແລະ ທີ່ນັ້ນມີຊາຍຜູ້ຫນຶ່ງ ທີ່ມືລີບ.[2]ມີບາງຄົນຈ້ອງຈັບຜິດພຣະອົງວ່າ
ພຣະອົງຈະຮັກສາຊາຍຄົນນີ້ໃນວັນສະບາໂຕຫລືບໍ່? ທັງນີ້ກໍເພື່ອຈະສາມາດກ່າວຫາພຣະອົງ.

[3]ພຣະເຢຊູເຈົ້າກ່າວແກ່ຊາຍມືລີບວ່າ, “ລຸກຂຶ້ນ ແລະ ຢືນຢູ່ກາງທຸກຄົນ.”[4]ແລ້ວພຣະອົງກໍເວົ້າກັບຝູງຊົນນັ້ນວ່າ, “ເປັນສິ່ງທີ່ຖືກຕ້ອງຫລືບໍ່
ທີ່ຈະທຳສິ່ງດີໃນວັນສະບາໂຕແທນທີ່ຈະທຳສິ່ງຊົ່ວ; ທີ່ຈະຊ່ວຍຊີວິດຄົນແທນທີ່ຈະໃຫ້ເຂົາຕາຍ?” ແຕ່ພວກເຂົາທັງຫລາຍໄດ້ມິດຢູ່.
[5]ພຣະອົງຫລຽວເບິ່ງພວກເຂົາດ້ວຍຄວາມເຄືອງໃຈ ແລະ ເສົ້າໃຈຢ່າງຍິ່ງ, ຕໍ່ໃຈທີ່ແຂງກະດ້າງຂອງພວກເຂົາ.
ແລະພຣະອົງໄດ້ກ່າວແກ່ຊາຍຄົນນັ້ນວ່າ, “ຢຽດມືຂອງເຈົ້າອອກ.” ລາວຈຶ່ງຢຽດມືອອກມາ,
ແລ້ວພຣະເຢຊູເຈົ້າຊົງຮັກສາມືຂອງລາວໃຫ້ດີປົກກະຕິ.[6]ພວກຟາຣີຊາຍຈຶ່ງຮີບອອກໄປໂດຍທັນທີ ແລະ
ວາງແຜນຮ້າຍກັບພວກເຮໂຣດຕໍ່ຕ້ານພຣະອົງເພື່ອໃຫ້ເຖິງຕາຍ.
[7]ຕໍ່ມາພຣະເຢຊູເຈົ້າກັບພວກສາວົກ ຂອງພຣະອົງອອກໄປທີ່ທະເລສາບ, ແລະ ມີປະຊາຊົນຫມູ່ໃຫຍ່ຕາມພຣະອົງມາຈາກຄາລີເລ, ແລະ
ຈາກຢູດາຍ.[8]ຈາກເຢຣູຊາເລັມ, ແລະ ຈາກອີດູມາຍ, ແລະຈາກທີ່ໄກເກີນໄປຈາກຈໍແດນ ແລະ ຂົງເຂດອ້ອມແອ້ມ ເມືອງຕີເຣ ແລະ ຊີໂດນ.
ເມື່ອພວກເຂົາໄດ້ຍິນທຸກສິ່ງທີ່ພຣະອົງກະທຳ, ປະຊາຊົນຫມູ່ໃຫຍ່ຈຶ່ງໄດ້ຕາມພຣະອົງມາ.
[9]ແລະ ພຣະອົງຈຶ່ງບອກໃຫ້ພວກສາວົກ
ຕຽມເຮືອນ້ອຍລຳຫນຶ່ງໄວ້ໃຫ້ພ້ອມເນື່ອງຈາກຝູງຊົນມາກັນຈຳນວນຫລາຍແລະເພື່ອບໍ່ໃຫ້ພວກເຂົາບຽດກັບພຣະອົງ.
[10]ເນື່ອງຈາກພຣະອົງໄດ້ຮັກສາຫລາຍຄົນ ເຮັດໃຫ້ຄົນທີ່ເຈັບປ່ວຍພະຍາຍາມບຽດໃກ້ພຣະອົງ ເພື່ອຈະໄດ້ແຕະຕ້ອງພຣະອົງ.
[11]ເມື່ອໃດກໍຕາມ
ທີ່ເຫລົ່າວິນຍານຊົ່ວເຫັນພຣະອົງພວກມັນລົ້ມລົງຕໍ່ຫນ້າພຣະອົງແລະຮ້ອງຂຶ້ນວ່າ,“ທ່ານຜູ້ເປັນພຣະບຸດຂອງພຣະເຈົ້າ.”[12]ພຣະອົງຈຶ່ງສັ່ງຫ້າມພວກມັນວ່າຢ່າເປີດເຜ
[13]ພຣະອົງຂຶ້ນໄປເທິງພູເຂົາ, ແລະ ຊົງເອີ້ນເອົາຜູ້ທີ່ພຣະອົງຕ້ອງການພົບມາຫາແລ້ວຄົນເຫລົ່ານັ້ນກໍມາຫາພຣະອົງ[14]ພຣະອົງແຕ່ງຕັ້ງສິບສອງຄົນ
ແລະເອີ້ນພວກເພິ່ນວ່າ,"ອັກຄະສາວົກ" ເພື່ອທີ່ພວກເຂົາຈະໄດ້ໃຊ້ເວລາຢູ່ກັບພຣະອົງ ແລະ ຈະໄດ້ສົ່ງພວກເຂົາອອກໄປປະກາດ,[15]ແລະ
ໃຫ້ສິດອຳນາດຂັບໄລ່ຜີມານຮ້າຍອອກໄດ້.[16]ພຣະອົງແຕ່ງຕັ້ງສິບສອງຄົນດັ່ງນີ້: ຊີໂມນ ຊຶ່ງພຣະອົງເອີ້ນຊື່ວ່າ ເປໂຕ;
[17]ຢາໂກໂບລູກຂອງເຊເບດາຍ, ແລະ ໂຢຮັນນ້ອງຊາຍຂອງຢາໂກໂບຊຶ່ງພຣະອົງເອີ້ນທັງສອງວ່າ"ໂບອະເນເຄ", ຊຶ່ງມີຄວາມຫມາຍວ່າ,
ລູກຟ້າຮ້ອງ;[18]ແລະ ອັນເດອາ, ຟີລິບ, ບາຣະໂທໂລມາຍ, ມັດທາຍ, ໂທມາ, ຢາໂກໂບ ລູກຊາຍ ຂອງອາລະຟາຍ, ທາດາຍ, ຊີໂມນ ຜູ້ຮັກຊາດ,
[19]ແລະ ຢູດາອິດສະກາຣີອົດຜູ້ຊຶ່ງຕໍ່ມາທໍຣະຍົດພຣະອົງ.
[20]ຕໍ່ມາເມື່ອພຣະເຢຊູເຈົ້າໄດ້ກັບໄປທີ່ບ້ານ, ແລະ ປະຊາຊົນກໍຍັງຫລັ່ງໄຫລຕາມພຣະອົງມາຈົນພຣະອົງບໍ່ມີຮອດເວລາກິນເຂົ້າຈີ່.
[21]ເມື່ອຄົນໃນຄອບຄົວຂອງພຣະອົງໄດ້ຍິນເລື່ອງນີ້ກໍຕ້ອງການມາເອົາພຣະອົງກັບໄປ, ເພາະພວກເຂົາເວົ້າກັນວ່າ, “ພຣະອົງ ເສັຽສະຕິໄປແລ້ວ”.
[22]ພວກທັມະຈານຊຶ່ງລົງມາຈາກເຢຣູຊາເລັມໄດ້ກ່າວວ່າ, “ພຣະອົງຖືກຄອບງຳໂດຍເບເອນເຊບູນ", ແລະ ທີ່ພຣະອົງຂັບຜີມານຮ້າຍອອກໄດ້
ກໍໂດຍອຳນາດ ຂອງເບເອນເຊບູນນາຍຜີມານຮ້າຍ.”
[23]ພຣະເຢຊູເຈົ້າຈຶ່ງເອີ້ນພວກເຂົາມາຫາພຣະອົງ ແລະ ຊົງກ່າວເປັນຄຳອຸປະມາວ່າ,
“ມານຊາຕານຈະຂັບໄລ່ມານຊາຕານເອງໃຫ້ອອກໄດ້ຢ່າງໃດ?[24]ຫາກອານາຈັກໃດ ແຕກແຍກກັນແລ້ວກໍບໍ່ອາດລວມກັນໄດ້ເຊັ່ນກັນ,
[25]ຖ້າຄົວເຮືອນໃດແຕກແຍກກັນແລ້ວ, ກໍບໍ່ອາດລວມກັນໄດ້ເຊັ່ນກັນ.
[26]ຖ້າມານຊາຕານຈະຕໍ່ສູ້ກັບຕົວມັນເອງ ແລະ ແຕກແຍກກັນມັນກໍບໍ່ສາມາດລວມກັນໄດ້, ແຕ່ຕ້ອງມາເຖິງຈຸດຈົບ.
[27]ບໍ່ມີຜູ້ໃດຈະເຂົ້າໄປໃນເຮືອນຂອງຄົນ ທີ່ແຂງແຮງ ແລະ ລັກເອົາສິ່ງຂອງໄປໄດ້ຫາກບໍ່ໄດ້ຈັບຄົນທີ່ແຂງແຮງນັ້ນມັດເສັຽກ່ອນ, ແລ້ວຈຶ່ງ
ຈະເຂົ້າໄປປຸ້ນເຮືອນນັ້ນໄດ້.”
[28]ເຮົາຂໍບອກຄວາມຈິງກັບທ່ານວ່າບາບທັງຫມົດຂອງມະນຸດຈະໄດ້ຮັບການຍົກໂທດ, ແມ່ນແຕ່ຄຳເວົ້າຫມິ່ນປະຫມາດທັງຫມົດ.
[29]ແຕ່ຜູ້ໃດກໍຕາມທີ່ເວົ້າຫມິ່ນປະຫມາດພຣະວິນຍານບໍຣິສຸດເຈົ້າຈະບໍ່ໄດ້ຮັບການຍົກໂທດແຕ່ຈະມີຄວາມຜິດບາບຕິດຕົວຕະຫລອດໄປ.”[30]ພຣະເຢຊູເຈົ້າກ່າວ
ເຊັ່ນນີ້ເພາະພວກເຂົາເວົ້າກັນວ່າ, “ພຣະອົງມີວິນຍານຊົ່ວຮ້າຍເຂົ້າສິງຢູ່.”
[31]ຕໍ່ມາແມ່ ແລະ ພີ່ນ້ອງຂອງພຣະອົງໄດ້ມາຫາພຣະອົງ ແລະ ຢືນຢູ່ຂ້າງນອກ. ພວກເຂົາໃຊ້ຄົນເຂົ້າໄປເອີ້ນພຣະອົງ.
[32]ໃນຂະນະທີ່ປະຊາຊົນນັ່ງອ້ອມພຣະອົງຢູ່ ພວກເຂົາເວົ້າວ່າ, “ທ່ານເອີຍ, ແມ່ແລະພີ່ນ້ອງຂອງທ່ານກຳລັງລໍພົບທ່ານຢູ່ຂ້າງນອກ.”
[33]ພຣະອົງຊົງຕອບວ່າ, “ຜູ້ໃດເປັນແມ່ ແລະ ພີ່ນ້ອງຂອງເຮົາ?”[34]ພຣະອົງກໍຫລຽວເບິ່ງລອບໆໄປຍັງປະຊາຊົນທີ່ນັ່ງອ້ອມ ຮອບພຣະອົງຢູ່
ແລະກ່າວວ່າ, “ຈົ່ງເບິ່ງນີ້ຄືແມ່ ແລະ ພີ່ນ້ອງຂອງເຮົາ![35]ຜູ້ໃດກໍຕາມທີ່ຍອມປະຕິບັດຕາມພຣະປະສົງຂອງພຣະເຈົ້າ,
ຜູ້ນັ້ນຄືພີ່ນ້ອງຊາຍຍິງແລະແມ່ຂອງເຮົາ.”


generated on Tue Jun 17 19:01:42 2025

# 4

[1]ພຣະເຢຊູເຈົ້າຊົງເລີ່ມຕົ້ນສອນປະຊາຊົນອີກຄັ້ງຫນຶ່ງທີ່ແຄມທະເລຊຶ່ງມີປະຊາຊົນຫລວງຫລາຍມາຟັງຄຳສອນຂອງພຣະອົງ.
ພຣະອົງຈຶ່ງສະເດັດລົງໄປໃນເຮືອ ແລະ ນັ່ງຢູ່ໃນເຮືອ ສ່ວນປະຊາຊົນໄດ້ນັ່ງທີ່ແຄມຝັ່ງທະເລ.
[2]ພຣະອົງສອນຫລາຍຢ່າງໂດຍໃຊ້ຄຳອຸປະມາພຣະອົງໄດ້ສອນວ່າ,

[3]"ຈົ່ງຟັງເຖີດ ມີຊາຍຄົນຫນຶ່ງອອກໄປຫວ່ານເມັດພືດ.[4]ຂະນະທີ່ເຂົາຫວ່ານເມັດພືດລົງໄປນັ້ນ, ບາງເມັດຕົກຕາມຫົນທາງ
ແລ້ວມີນົກມາສັບກິນເສັ້ຽ.[5]ບາງເມັດ ຕົກໃສ່ດິນທີ່ມີຫີນ, ທີ່ມີດິນຫນ້ອຍແລະພືດນັ້ນຈຶ່ງງອກຂຶ້ນມາໃນທັນທີເພາະພື້ນດິນບໍ່ເລິກ.
[6]ແຕ່ເມື່ອຖືກແສງແດດກ້າ, ພືດນັ້ນກໍຫ່ຽວແຫ້ງໄປເນື່ອງຈາກຮາກຍັງບໍ່ເລິກ.[7]ເມັດພືດອື່ນທີ່ໄດ້ຕົກໃສ່ຫນາມ ແລະ
ຕົ້ນຫນາມເຫລົ່ານີ້ກໍໃຫຍ່ຂຶ້ນດ້ວຍກັນແລະຫຸ້ມຮັດພືດເຫລົ່ານັ້ນໄວ້ຈຶ່ງເກີດຜົນບໍ່ໄດ້.
[8]ບາງເມັດກໍຕົກໃສ່ພື້ນດິນທີ່ດີ, ຊຶ່ງເຮັດໃຫ້ພືດນັ້ນງອກງາມຈະເຣີນເຕີບໂຕ ແລະເກີດຜົນໄດ້ໂດຍບາງສ່ວນກໍອອກຜົນເປັນສາມສິບເທົ່າ,
ຫົກສິບເທົ່າ ແລະຮ້ອຍເທົ່າ."[9]ແລະ ພຣະອົງຈຶ່ງໄດ້ກ່າວວ່າ, "ຜູ້ໃດມີຫູຟັງຈົ່ງຟັງເຖີດ!"
[10]ເມື່ອພຣະເຢຊູເຈົ້າຢູ່ຕາມລຳພັງກໍມີຜູ້ຄົນທີ່ໃກ້ຊິດພຣະອົງແລະສາວົກສິບສອງຄົນ ມາຫາພຣະອົງແລະຖາມກ່ຽວກັບຄຳອຸປະມານັ້ນ.
[11]ພຣະອົງຈຶ່ງຊົງຕອບພວກເພິ່ນ ວ່າ,"ສຳລັບພວກທ່ານ, ເຮົາໄດ້ເປີດເຜີຍຄວາມເລິກລັບແຫ່ງອານາຈັກສະຫວັນໃຫ້ກັບທ່ານ,
ແຕ່ຄົນອື່ນນັ້ນເຮົາກ່າວກັບພວກເຂົາເປັນຄຳອຸປະມາ[12]ເພື່ອວ່າເມື່ອພວກເຂົາເບິ່ງແລ້ວເບິ່ງອີກກໍເບິ່ງບໍ່ເຫັນ, ແລະ ເມື່ອເຂົາຟັງແລ້ວ,
ຟັງອີກແຕ່ກໍບໍ່ເຂົ້າໃຈ, ບໍ່ສະນັ້ນພວກເຂົາ ຈະກັບມາຫາພຣະເຈົ້າ ແລະ ຮັບການການຍົກໂທດຈາກພຣະອົງ."
[13]ແລ້ວພຣະເຢຊູເຈົ້າໄດ້ເວົ້າກັບພວກເພິ່ນວ່າ, "ພວກທ່ານບໍ່ເຂົ້າໃຈຄຳອຸປະມານີ້ບໍ?
ແລ້ວພວກທ່ານຈະເຂົ້າໃຈຄຳອຸປະມາທັງຫມົດນັ້ນໄດ້ຢ່າງໃດ?[14]ຊາວນາຜູ້ຫວ່ານໄດ້ຫວ່ານເມັດພືດ ຄືຜູ້ທີ່ຫວ່ານພຣະທັມຂອງພຣະເຈົ້າ.
[15]ເມັດທີ່ຕົກຕາມຫົນທາງ, ໃນບ່ອນທີ່ໄດ້ຫວ່ານຖ້ອຍຄຳຂອງພຣະເຈົ້າ,
ເມື່ອເຂົາໄດ້ຍິນພຣະທັມນັ້ນມານຊາຕານກໍມາເອົາພຣະທັມຈາກເຂົາໄປເສັ້ຽທັນທີ.
[16]ບາງສ່ວນຕົກໃສ່ພື້ນຫີນທີ່ດິນທີ່ມີຫນ້ອຍ, ຄືຜູ້ທີ່ໄດ້ຍິນພຣະທັມແລ້ວ, ກໍຮັບເອົາໄວ້ທັນທີດ້ວຍຄວາມຊື່ນຊົມຍິນດີ.
[17]ພວກເຂົາບໍ່ມີຮາກຫມັ້ນໃນເຂົາເອງ, ຈຶ່ງເຮັດໃຫ້ເຂົາມີຄວາມອົດທົນໄດ້ພຽງເວລາສັ້ນໆ. ໃນເມື່ອໄດ້ຮັບຄວາມຍາກລຳບາກ ຫລື
ຖືກຂົ່ມເຫັງເພາະພຣະທັມພວກເຂົາຈຶ່ງສະດຸດທັນທີ.
[18]ແລະ ບາງເມັດຕົກໃສ່ພື້ນດິນກາງພຸ່ມຫນາມ, ຄືຜູ້ທີ່ໄດ້ຟັງພຣະທັມ.[19]ແຕ່ຍັງມີຄວາມສົນໃຈກັບໂລກນີ້, ການຫລອກລວງດ້ວຍຄວາມຮັ່ງມີ,
ແລະທັງມີຄວາມປາຖນາໃນສິ່ງຕ່າງໆໄດ້ເຂົ້າ ຊຶ່ງສິ່ງເຫລົ່ານີ້ມາຫຸ້ມຮັດ ພຣະທັມໄວ້ບໍ່ໃຫ້ເກີດຜົນ.[20]ສ່ວນເມັດທີ່ ຕົກໃສ່ພື້ນດິນທີ່ດີ,
ຄືຜູ້ທີ່ໄດ້ຟັງພຣະທັມແລ້ວ, ຮັບໄວ້ຈຶ່ງເຮັດໃຫ້ເກີດຜົນ - ສາມສິບເທົ່າ, ຫົກສິບເທົ່າ ແລະ ຫນຶ່ງຮ້ອຍເທົ່າ."
[21]ພຣະເຢຊູເຈົ້າກ່າວກັບພວກເຂົາ ວ່າ, "ເມື່ອທ່ານນຳຕະກຽງເຂົ້າມາໃນເຮືອນນັ້ນທ່ານນຳເອົາໄປວາງໄວ້ຢູ່ກ້ອງຖັງ,
ຫລືວ່ານຳໄປວາງໄວ້ກ້ອງຕຽງນອນບໍ? ທ່ານຍ່ອມນຳໄປ ຕັ້ງໄວ້ເທິງເຊີງຕະກຽງ.[22]ເຊັ່ນດຽວກັນ ບໍ່ມີສິ່ງໃດທີ່ຖືກປົດຊ້ອນໄວ້ຈະບໍ່ມີໃຜຮູ້, ແລະ
ບໍ່ມີຄວາມລັບໃດຈະບໍ່ຖືກເປີດເຜີຍ,[23]ຜູ້ໃດມີຫູຟັງຈົ່ງຟັງເອົາ!"
[24]ພຣະເຢຊູເຈົ້າກ່າວກັບພວກເຂົາ ວ່າ, "ທ່ານຈົ່ງເອົາໃຈໃສ່ໃນສິ່ງທີ່ທ່ານໄດ້ຍິນ, ດ້ວຍວ່າ ພວກທ່ານຈະວັດແທກໃຫ້ຄົນອື່ນດ້ວຍ
ເຄື່ອງວັດແທກຢ່າງໃດ, ພຣະອົງກໍຈະວັດແທກໃຫ້ກັບພວກທ່ານດ້ວຍເຄື່ອງວັດແທກຢ່າງນັ້ນ.[25]ດ້ວຍວ່າ, ຜູ້ໃດທີ່ມີຢູ່ແລ້ວ,
ພຣະອົງກໍຈະເພີ່ມຕື່ມໃຫ້ອີກ, ແຕ່ຜູ້ໃດທີ່ບໍ່ມີ ແມ່ນວ່າເຂົາມີຢູ່ນັ້ນ ພຣະອົງກໍຈະເອົາໄປເສັ້ຽຈາກເຂົາ."
[26]ແລະພຣະອົງກ່າວວ່າ, "ອານາຈັກຂອງພຣະເຈົ້າເປັນເຫມືອນຊາຍຄົນຫນຶ່ງໄດ້ຫວ່ານເມັດພືດໃສ່ນາຂອງຕົນ.[27]ເມື່ອເຂົາ
ນອນຫລັບໃນເວລາກາງຄືນແລ້ວຕື່ນຂຶ້ນມາໃນຕອນກາງເວັນເມັດທີ່ເຂົາຫວ່ານກໍງອກ ແລະ
ຈະເຕີບໃຫຍ່ຂຶ້ນເຂົາບໍ່ສາມາດເຂົ້າໃຈວ່າເປັນໄປໄດ້ຢ່າງໃດ.[28]ເພາະວ່າແຜ່ນດິນເຮັດໃຫ້ ເມັດພືດງອກງາມເຕີບໂຕຂຶ້ນເອງ.
ທຳອິດອອກເປັນໃບກ່ອນແລ້ວຕໍ່ມາເປັນຮວງຕໍ່ຈາກນັ້ນກໍມີເມັດເຂົ້າຕຶງເຕັມຮວງ.[29]ເມື່ອຮວງເຂົ້າສຸກ ແລະ
ພ້ອມທີ່ຈະເກັບກຽວພຣະອົງກໍສົ່ງຄົນມາກ່ຽວໃນທັນທີ, ເພາະເວລາທີ່ຈະເກັບກ່ຽວໄດ້ມາເຖິງແລ້ວ."
[30]ພຣະເຢຊູເຈົ້າກ່າວວ່າ, "ເຮົາຈະປຽບແຜ່ນດິນສະຫວັນເຫມືອນອັນໃດດີ? ຫລືຈະເວົ້າເປັນຄຳອຸປະມາຢ່າງໃດ?
[31]ກໍປຽບເຫມືອນແກ່ນຜັກກາດທີ່ຖືກຫວ່ານລົງໄປໃນດິນ ຊຶ່ງເມັດຂອງມັນກໍນ້ອຍກວ່າເມັດໃດໆຂອງພືດທັງປວງໃນໂລກ[32]ແຕ່ເມື່ອຖືກຫວ່ານລົງ
ໄປມັນກໍເຕີບໂຕຂຶ້ນແລະ ກາຍເປັນຕົ້ນທີ່ໃຫຍ່ ກວ່າຜັກທັງປວງໃນສວນນັ້ນແລະ
ມັນແຜ່ກິ່ງກ້ານໃຫຍ່ອອກມາຈຶ່ງເຮັດໃຫ້ພວກນົກປ່າສາມາດມາເຮັດຮັງຢູ່ໄດ້."
[33]ພຣະອົງໄດ້ກ່າວສອນຖ້ອຍຄຳຂອງພຣະເຈົ້າເປັນຄຳອຸປະມາແບບນີ້ຫລາຍເລື່ອງ ຕາມທີ່ພວກເຂົາສາມາດເຂົ້າໃຈໄດ້.
[34]ແລະພຣະອົງບໍ່ໄດ້ກ່າວສອນໂດຍວິທີອື່ນເລີຍນອກຈາກໃຊ້ຄຳອຸປະມາ
ແຕ່ເມື່ອປະຊາຊົນກັບໄປແລ້ວພຣະອົງໄດ້ອະທິບາຍທຸກໆສິ່ງສູ່ສາວົກຂອງພຣະອົງຟັງ.
[35]ໃນຕອນຄ່ຳຂອງວັນດຽວກັນນັ້ນ ພຣະເຢຊູເຈົ້າກ່າວແກ່ພວກສາວົກວ່າ,"ໃຫ້
ພວກເຮົາຂ້ວາມໄປຟາກນັ້ນກັນເທາະ."[36]ຂະນະທີ່ພວກເຂົາລາປະຊາຊົນແລ້ວພວກເຂົາໄດ້ເຊີນພຣະເຢຊູສະເດັດລົງເຮືອໄປກັບພວກເຂົາແລະມີເຮືອລຳອື່ນອີກໄປນໍ
ພຣະອົງ[37]ແລະມີພະຍຸໃຫຍ່ເກີດຂຶ້ນແລະໄດ້ຊັດຄື້ນເຂົ້າໄປໃນເຮືອຈົນເຮືອເກືອບຈະເຕັມດ້ວຍນ້ຳ.
[38]ແຕ່ພຣະເຢຊູເຈົ້ານັ້ນນອນຫນູນຫມອນຫລັບຢູ່ທ້າຍເຮືອ. ພວກສາວົກຂອງພຣະອົງຈຶ່ງໄປປຸກພຣະອົງໃຫ້ຕື່ນຂຶ້ນ, ພວກເຂົາເວົ້າວ່າ,
"ອາຈານເອີຍ, ພຣະອົງບໍ່ເປັນຫ່ວງພວກຂ້ານ້ອຍບໍ? ພວກຂ້ານ້ອຍກຳລັງຈະຕາຍແລ້ວ[39]ພຣະອົງຈຶ່ງຕື່ນຂຶ້ນ ແລະ ກ່າວແກ່ທະເລວ່າ,
"ຈົ່ງສະຫງົບງຽບແມ!" ແລ້ວພາຍຸກໍຢຸດທະເລກໍສະຫງົບງຽບລົງ.
[40]ແລ້ວພຣະເຢຊູເຈົ້າກໍກ່າວຕໍ່ພວກສາວົກວ່າ, "ເປັນຫຍັງພວກເຈົ້າຈຶ່ງຢ້ານ?
ພວກເຈົ້າຍບໍ່ມີຄວາມເຊື່ອບໍ?"[41]ແຕ່ພວກເພິ່ນຕົກໃຈຢ້ານຫລາຍຈຶ່ງເວົ້າຕໍ່ກັນແລະ ກັນວ່າ, "ທ່ານຜູ້ນີ້ເປັນຜູ້ໃດນໍ? ແມ່ນແຕ່ລົມ ແລະ
ຟອງທະເລກໍຍອມຟັງຄວາມເພິ່ນ."


generated on Tue Jun 17 19:01:42 2025

5 [1]ພວກເຂົາຂ້ວາມມາອີກຟາກຫນຶ່ງຂອງ ທະເລເຖິງເຂດແດນເຄຣາຊາ.[2]ເມື່ອພຣະເຢຊູເຈົ້າອອກຈາກເຮືອທັນໃດນັ້ນ
ມີຊາຍຜູ້ຫນຶ່ງຖືກຜີຊົ່ວຮ້າຍສິງຢູ່ໄດ້ແລ່ນອອກຈາກອຸໂມງຝັງສົບມາພົບພຣະອົງ.

[3]ຊາຍຜູ້ນີ້ອາສັຍຢູ່ໃນອຸບໂມງຝັງສົບ. ບໍ່ມີຜູ້ໃດສາມາດມັດ ຫລື ແມ່ນແຕ່ລ່າມໂສ້ມັນໄວ້ໄດ້.[4]ເຂົາຖືກລ່າມໂສ້ໃສ່ຕີນຜູກມັດໄວ້ຫລາຍເທື່ອແລ້ວ,
ແຕ່ມັນກໍຫັກໂສ້ໃຫ້ຂາດ ແລະ ຫັກໃຫ້ຫມຸ່ນ. ບໍ່ມີຜູ້ໃດທີ່ມີກຳລັງທີ່ສາມາດປາບມັນໄດ້.
[5]ເຂົາແຜດສຽງຮ້ອງທັງຄືນທັງເວັນຢູ່ໃນອຸໂມງຝັງສົບແລະຕາມພູເຂົາ ເຂົາປາດຕາມເນື້ອຕົວຂອງຕົນເອງດ້ວຍຫີນແຫລມຄົມ.[6]ເມື່ອ
ເຂົາຫລຽວເຫັນພຣະເຢຊູເຈົ້າແຕ່ໄກ ເຂົາຈຶ່ງແລ່ນມາຫາແລະຂາບລົງຕໍ່ຫນ້າພຣະອົງ,
[7]ເຂົາຮ້ອງດ້ວຍສຽງອັນດັງວ່າ, “ພຣະເຢຊູພຣະບຸດຂອງພຣະເຈົ້າຜູ້ສູງສຸດເອີຍ, ຂ້ານ້ອຍຫຍຸ້ງກ່ຽວ ຫຍັງກັບທ່ານບໍ?
ຂ້ານ້ອຍຂໍຮ້ອງທ່ານເພື່ອເຫັນແກ່ພຣະເຈົ້າຢ່າທໍຣະມານຂ້ານ້ອຍເລີຍ”.[8]ເພາະພຣະເຢຊູເຈົ້າໄດ້ບອກມັນວ່າ,
“ເຈົ້າຜີຊົ່ວຮ້າຍຈົ່ງອອກຈາກຊາຍຄົນນີ້ແມ”.
[9]ພຣະອົງໄດ້ຖາມມັນວ່າ, “ມຶງຊື່ຫຍັງ?” ມັນຕອບພຣະອົງວ່າ,“ຂ້ານ້ອຍຊື່ກອງທັບເພາະ
ພວກຂ້ານ້ອຍມີຢູ່ດ້ວຍກັນຫລາຍໂຕ.”[10]ມັນຂໍຮ້ອງນຳພຣະອົງຊ້ຳແລ້ວຊ້ຳອີກບໍ່ໃຫ້ຂັບໄລ່ພວກ ມັນອອກໄປຈາກເຂດແດນນີ້.
[11]ບັດນີ້ມີຫມູຝູງໃຫຍ່ກຳລັງຫາກິນຢູ່ຕາມເນີນພູ,[12]ແລະ ພວກມັນຂໍນຳພຣະເຢຊູເຈົ້າວ່າ,
“ໃຫ້ພວກເຮົາເຂົ້າໄປສິງຢູ່ໃນຝູງຫມູນັ້ນເຖີດ.”[13]ພຣະອົງຈຶ່ງຊົງອະນຸຍາດຕາມນັ້ນ ພວກຜີຊົ່ວຮ້າຍຈຶ່ງອອກມາ ແລະ ເຂົ້າໄປສິງຢູ່ໃນຝູງຫມູ,
ຫມູທັງຫມົດປະມານສອງພັນໂຕ ກໍຟ້າວແລ່ນໂຕນຫນ້າຜາຊັນລົງສູ່ທະເລຈົມນ້ຳຕາຍຫມົດ.
[14]ພວກຄົນລ້ຽງຫມູໄດ້ແລ່ນຫນີໄປ ແລະ ໄດ້ເລົ່າສິ່ງທີ່ເກີດຂຶ້ນໃຫ້ແກ່ຄົນທີ່ຢູ່ໃນເມືອງນັ້ນ ແລະ ຕາມນອກເມືອງໄດ້ຟັງ, ແລະ
ດັ່ງນັ້ນຄົນຫລວງຫລາຍຈຶ່ງພາກັນອອກມາເບິ່ງເຫດການທີ່ເກີດຂຶ້ນ.[15]ຫລັງຈາກນັ້ນພວກເຂົາຈຶ່ງມາຫາພຣະເຢຊູເຈົ້າ ແລະ
ພວກເຂົາໄດ້ເຫັນຊາຍທີ່ຜີມານຮ້າຍທັງກອງທັບສິງຢູ່ນັ້ນກຳລັງນັ່ງສະຫງົບຢູ່ເຂົາສວມເສື້ອຜ້າ, ແລະ ມີສະຕິກັບຄືນມາ; ແລະ
ພວກເຂົາຈຶ່ງຮູ້ສຶກຢ້ານກົວຫລາຍ.
[16]ຜູ້ທີ່ເຫັນສິ່ງທີ່ເກີດຂຶ້ນກັບຊາຍທີ່ຖືກຜີຮ້າຍສິງ ກໍໄດ້ເລົ່າເຫດການຢ່າງລະອຽດໃຫ້ພວກເຂົາຟັງ, ແລະ ກໍພວກເຂົາກໍໄດ້ຮັບຟັງເລື່ອງຫມູດ້ວຍ.
[17]ພວກເຂົາ ຈຶ່ງເລີ່ມຂໍຮ້ອງພຣະອົງໃຫ້ຫນີອອກໄປຈາກ ເຂດແດນຂອງພວກຕົນ.
[18]ເມື່ອພຣະອົງສະເດັດລົງເຮືອ, ຊາຍທີ່ຖືກຜີສິງຂໍຮ້ອງພຣະອົງໃຫ້ເຂົາຕິດຕາມໄປດ້ວຍ.[19]ແຕ່ພຣະອົງບໍ່ອະນຸຍາດ. ໂດຍກ່າວກັບເຂົາວ່າ,
“ຈົ່ງກັບເມືອບ້ານຫາພີ່ນ້ອງຂອງເຈົ້າແລະບອກໃຫ້ພວກເຂົາຟັງ ເຖິງສິ່ງທີ່ພຣະຜູ້ເປັນເຈົ້າໄດ້ເຮັດສຳລັບເຈົ້າ,
ແລະພຣະເມດຕາທີ່ພຣະອົງຊົງສຳແດງໃຫ້ແກ່ເຈົ້າ.”[20]ເຂົາຈຶ່ງຈາກໄປແລະຕັ້ງຕົ້ນປະກາດຄວາມຍິ່ງໃຫຍ່ທີ່ພຣະເຢຊູເຈົ້າໄດ້ເຮັດແກ່ຕົນໃນແຂວງເດກາໂປລີ,
ແລະທຸກຄົນກໍງຶດປະຫລາດໃຈ.
[21]ເມື່ອ ພຣະເຢຊູເຈົ້າຂີ່ເຮືອຂ້າມຟາກໄປອີກຝັ່ງ, ຂະນະທີ່ພຣະອົງຢູ່ທີ່ແຄມທະເລໄດ້ມີປະຊາຊົນຫມູ່ໃຫຍ່ມາເຕົ້າໂຮມກັນອ້ອມພຣະອົງ.
[22]ມີຊາຍຄົນຫນຶ່ງຊື່ວ່າຢາອີໂຣເປັນນາຍທັມະສາລາໄດ້ມາຫາພຣະອົງເມື່ອເຂົາເຫັນພຣະເຢຊູເຈົ້າ,
ຈຶ່ງກົ້ມຂາບລົງທີ່ຕີນຂອງພຣະອົງ[23]ເຂົາຮ້ອງຂໍຄວາມຊ່ວຍເຫລືອຈາກພຣະເຢຊູເຈົ້າວ່າ, "ລູກສາວຂ້ານ້ອຍເຈັບຫນັກໃກ້ຈະຕາຍແລ້ວ.
ຂໍພຣະອົງສະເດັດໄປ ແລະວາງມືໃສ່ນາງດ້ວຍເຖີດເພື່ອລາວຈະຫາຍດີ
ແລະມີຊີວິດ."[24]ດັ່ງນັ້ນພຣະເຢຊູເຈົ້າກໍໄປກັບລາວມີປະຊາຊົນຫລວງຫລາຍໄດ້ຕິດຕາມພຣະອົງ ແລະ ລ້ອມຮອບບຽດສຽດພຣະອົງ.
[25]ມີຍິງຄົນຫນຶ່ງທີ່ເປັນພະຍາດເລືອດຕົກໄດ້ສິບສອງປີ,[26]ນາງເປັນທຸກຫລາຍກັບການຮັກສາຈາກຫມໍຢ່າງມາກມາຍ ແລະ ຫຸ້ມເຫທຸກຢ່າງທີ່ນາງມີ,
ແຕ່ບໍ່ໄດ້ຊ່ວຍອັນໃດທັງອາການກັບຮຸນແຮງຂຶ້ນກວ່າເກົ່າອີກ.[27]ນາງເຄີຍໄດ້ຍິນເລື່ອງລາວກ່ຽວກັບພຣະເຢຊູເຈົ້າ,
ດັ່ງນັ້ນນາງຈຶ່ງຍ່າງຕາມຫລັງພຣະອົງຂະນະຊົງເດີນໄປກັບປະຊາຊົນ ແລະ ນາງໄດ້ບາຍເຄື່ອງນຸ່ງ ຂອງພຣະອົງ.
[28]ເນື່ອງຈາກນາງໄດ້ກ່າວວ່າ, “ຖ້າເຮົາ ໄດ້ບາຍພຽງແຕ່ເຄື່ອງນຸ່ງຂອງພຣະອົງ, ເຮົາກໍຈະຫາຍດີ.”[29]ໃນຂະນະທີ່ນາງບາຍເຄື່ອງນຸ່ງຂອງພຣະອົງ.
ເລືອດຂອງນາງກໍຢຸດໄຫລທັນທີ, ນາງສຳພັດໄດ້ວ່າຮ່າງກາຍຂອງນາງໄດ້ຮັບການຮັກສາຈາກຄວາມເຈັບປ່ວຍທີ່ເປັນຢູ່.
[30]ທັນໃດນັ້ນພຣະເຢຊູເຈົ້າກໍຮູ້ໄດ້ວ່າ ຣິດອຳນາດຂອງພຣະອົງໄດ້ໄຫລອອກຈາກພຣະອົງ. ພຣະອົງຈຶ່ງຫັນຫນ້າມາທາງປະຊາຊົນ ແລະ
ໄດ້ຖາມວ່າ,“ຜູ້ໃດບາຍເຄື່ອງນຸ່ງຂອງເຮົາ?”[31]ສາວົກຂອງພຣະອົງເວົ້າກັບພຣະອົງວ່າ, "ພຣະອົງກໍເຫັນແລ້ວວ່າປະຊາຊົນບຸບຽດພຣະອົງຢູ່?
ແລ້ວພຣະອົງຍັງຈະບອກວ່າຜູ້ໃດບາຍເຮົາ?”[32]ແຕ່ພຣະເຢຊູເຈົ້າໄດ້ຫລຽວໄປອ້ອມໆ ເພື່ອເບິ່ງວ່າຜູ້ໃດເປັນຜູ້ເຮັດ.
[33]ສ່ວນຍິງນັ້ນ, ທີ່ສຳພັດກັບສິ່ງທີ່ເກີດຂຶ້ນກັບຕົນກໍເກີດຄວາມຢ້ານກົວ ແລະຕົວສັ່ນ. ນາງເຂົ້າມາ ແລະ ກົ້ມລົງຕໍ່ຫນ້າພຣະອົງ ແລະ
ເວົ້າຄວາມຈິງທັງຫມົດສູ່ພຣະອົງຟັງ.[34]ພຣະອົງຈຶ່ງກ່າວກັບນາງວ່າ, “ຍິງເອີຍ,
ຄວາມເຊື່ອຂອງເຈົ້າເຮັດໃຫ້ເຈົ້າດີແລ້ວຈົ່ງໄປເປັນສຸກແລະຫາຍຈາກພະຍາດສາ.”
[35]ຂະນະທີ່ພຣະເຢຊູເຈົ້າຍັງກ່າວ, ມີຄົນທີ່ມາຈາກເຮືອນຂອງນາຍທັມະສາລາມາບອກ ວ່າ, “ລູກສາວຂອງເຈົ້າຕາຍແລ້ວ.
ເຫດໃດຈຶ່ງລົບກວນອາຈານອີກ?”
[36]ແຕ່ເມື່ອພຣະເຢຊູເຈົ້າໄດ້ຍິນສິ່ງທີ່ເຂົາບອກຈຶ່ງກ່າວກັບນາຍທັມມະສາລາວ່າ,“ຢ່າວິຕົກເລີຍຈົ່ງເຊື່ອເຖີນ.
[37]ພຣະອົງບໍ່ອະນຸຍາດໃຫ້ຜູ້ໃດຕິດຕາມພຣະອົງໄປນອກຈາກ ເປໂຕ, ຢາໂກໂບ ແລະ ໂຢຮັນນ້ອງຊາຍຂອງຢາໂກໂບ.
[38]ພວກເຂົາມາຮອດເຮືອນຂອງນາຍທັມະສາລາ ແລ້ວ; ພຣະອົງກໍເຫັນຄົນວຸ້ນວາຍຢູ່ການຮ້ອງໄຫ້ແລະ ສຽງຄ່ຳຄວນ.
[39]ເມື່ອພຣະອົງສະເດັດເຂົ້າໄປໃນເຮືອນນັ້ນ, ຊົງກ່າວແກ່ພວກເຂົາວ່າ,“ພວກເຈົ້າວຸ້ນວາຍແລະຮ້ອງໄຫ້ຄ່ຳຄວນເຮັດຫຍັງ? ເດັກຍິງຜູ້ນີ້
ບໍ່ໄດ້ຕາຍດອກນາງພຽງແຕ່ຫລັບໄປເທົ່ານັ້ນ.”[40]ພວກເຂົາພາກັນຫົວຂວັນພຣະອົງ. ພຣະອົງຈຶ່ງໃຫ້ພວກເຂົາທັງຫມົດອອກໄປນອກເຮືອນ ແລະ
ພາພໍ່ແມ່ຂອງເດັກນ້ອຍ ແລະພວກທີ່ມາກັບພຣະອົງເຂົ້າໄປຫາເດັກນັ້ນ.
[41]ພຣະອົງຈັບມືເດັກນ້ອຍນັ້ນແລະກ່າວແກ່ນາງວ່າ,“ຕາລີທາກຸມ”ຫມາຍຄວາມວ່າ: ລູກເອີຍເຮົາບອກໃຫ້ເຈົ້າລຸກຂຶ້ນ.
[42]ທັນໃດນັ້ນເດັກຍິງກໍລຸກຂຶ້ນແລະຍ່າງໄປມາ. (ເດັກນັ້ນອາຍຸໄດ້ສິບສອງປີ) ພວກເຂົາກໍພາກັນປະຫລາດໃຈເປັນຢ່າງຍິ່ງ.
[43]ພຣະອົງຊົງກ່າວກັບພວກເຂົາຢ່າງຈິງຈັງວ່າບໍ່ໃຫ້ບອກເລື່ອງນີ້ແກ່ໃຜ ແລະ ຊົງບອກພວກເຂົາເອົາອາຫານມາໃຫ້ເດັກກິນ.

6 [1]ເມື່ອອອກຈາກທີ່ນັ້ນ ພຣະເຢຊູເຈົ້າ ໄດ້ມາເຖິງບ້ານເກີດຂອງພຣະອົງ, ມີພວກສາວົກ ຕິດຕາມພຣະອົງ[2]ເມື່ອເຖິງວັນສະບາໂຕ,
ພຣະເຢຊູເຈົ້າໄດ້ສັ່ງສອນໃນທັມະສາລາ. ປະຊາຊົນຫລວງຫລາຍ ທີ່ໄດ້ຍິນສິ່ງທີ່ພຣະອົງສອນກໍປະຫລາດໃຈ. ພວກເຂົາເວົ້າວ່າ, "ຄົນນີ້
ເອົາຄຳສັ່ງສອນນີ້ມາແຕ່ໃສ?" "ເຂົາໄດ້ຮັບປັນຍາແບບນີ້ມາຈາກຜູ້ໃດ?"
"ເຂົາເຮັດການອັດສະຈັນນີ້ດ້ວຍມືຂອງເຂົາໄດ້ຢ່າງໃດ?"[3]"ເຂົາເປັນພຽງລູກຊ່າງໄມ້ບໍ່ແມ່ນບໍ?, ລູກຊາຍຂອງມາຣີ ອ້າຍຂອງຢາໂກໂບ, ໂຢເຊັບ,
ຢູດາແລະ ຊີໂມນ ພວກນ້ອງສາວຂອງລາວກໍຢູ່ກັບເຮົາທີ່ນີ້ບໍ່ແມ່ນບໍ?" ແລະພວກເຂົາກໍບໍ່ພໍໃຈພຣະເຢຊູຂຶ້ນມາ.

[4]ແລ້ວພຣະເຢຊູເຈົ້າກໍກ່າວແກ່ພວກເຂົາວ່າ, "ຜູ້ປະກາດພຣະທັມມັກຈະບໍ່ໄດ້ຮັບກຽດ ໃນບ້ານເກີດຂອງຕົນ, ໃນໝູ່ຍາດພີ່ນ້ອງ
ແລະຄອບຄົວຂອງຕົນ."[5]ພຣະເຢຊູບໍ່ສາມາດເຮັດການອັດສະຈັນໃດ, ນອກຈາກວາງມື ແລະ ຮັກສາຄົນປ່ວຍສອງສາມຄົນ.
[6]ພຣະອົງປະຫລາດໃຈກັບຄວາມບໍ່ເຊື່ອຂອງເຂົາ. ຫລັງຈາກນັ້ນພຣະອົງກໍໄດ້ອອກໄປສັ່ງສອນອ້ອມຮອບເຂດນັ້ນ.
[7]ແລ້ວພຣະອົງໄດ້ເອີ້ນສາວົກສິບສອງຄົນເຂົ້າມາ ເພື່ອສົ່ງພວກເພິ່ນອອກໄປເປັນຄູ່ ໆ, ແລະ
ພຣະອົງມອບສິດທິອຳນາດເໜືອວິນຍານຊົ່ວຮ້າຍແກ່ເຂົາ,[8]ແລະ ພຣະອົງຊົງສັ່ງພວກເພິ່ນວ່າ, ເມື່ອພວກເພິ່ນອອກເດີນທາງຢ່າເອົາຫຍັງໄປນຳ,
ນອກຈາກໄມ້ຄ້ອນເທົ່າ, ເຂົ້າຈີ່, ຢ່າເອົາກະເປົາ ແລະ ເງິນທີ່ຢູ່ໃນເຂັມຂັດໄປ -[9]ແຕ່ໃຫ້ໃສ່ເກີບຮັດສາຍ, ແລະ ຢ່ານຸ່ງ ເສື້ອຄຸມສອງຊັ້ນ"
[10]ແລ້ວພຣະອົງບອກກັບພວກເຂົາວ່າ, "ຖ້າທ່ານເຂົ້າໄປພັກທີ່ເຮືອນໃດໃຫ້ຢູ່ທີ່ນັ້ນຈົນກວ່າຈາກບ່ອນນັ້ນໄປ.[11]ຖ້າເມືອງໃດບໍ່ຕ້ອນຮັບທ່ານ
ຫລືບໍ່ຟັງທ່ານ, ຈົ່ງອອກຈາກທີ່ນັ້ນ, ແລະ ສັນຂີ້ຝຸ່ນທີ່ຕີນຂອງພວກທ່ານອອກ." ເພື່ອເປັນພະຍານຕໍ່ພວກເຂົາ."
[12]ພວກເພິ່ນກໍອອກໄປ ແລະ ໄດ້ປະກາດໃຫ້ຄົນເຫລົ່ານັ້ນຖີ້ມໃຈເກົ່າເອົາໃຈໃໝ່ຫັນກັບຈາກຄວາມບາບຂອງເຂົາ.[13]ພວກເພິ່ນໄດ້ຂັບໄລ່
ວິນຍານຮ້າຍອອກຫລາຍໂຕ ແລະໄດ້ເຈີມຄົນເຈັບປ່ວຍເຫລົ່ານັ້ນດ້ວຍນ້ຳມັນ ແລະ ໄດ້ຮັກສາພວກເຂົາໃຫ້ຫາຍດີ.
[14]ເມື່ອກະສັດເຮໂຣດໄດ້ຍິນເລື່ອງນີ້ເພາະຊື່ຂອງພຣະເຢຊູເຈົ້າໄດ້ຊ່າລືໄປບາງຄົນບອກວ່າເປັນ, "ໂຢຮັນບັບຕິສະໂຕທີ່ຄືນມາຈາກຄວາມຕາຍ,
ດ້ວຍເຫດນີ້ເພິ່ນຈຶ່ງມີຣິດອຳນາດ ເຮັດການອັດສະຈັນ."[15]ບາງຄົນກໍບອກວ່າ,"ເພິ່ນແມ່ນ ເອລີຢາ." ບາງຄົນກໍບອກວ່າ, "ເພິ່ນເປັນຜູ້ທຳນວາຍ,
ແບບດຽວກັບຜູ້ທຳນວາຍໃນສະໄໝກ່ອນ."
[16]ແຕ່ເມື່ອກະສັດເຮໂຣດໄດ້ຍິນເພິ່ນກໍເວົ້າວ່າ"ໂຢຮັນທີ່ຖືກຕັດຫົວຜູ້ນັ້ນແຫລະໄດ້ຄືນມີຊີວິດອີກ."[17]ເພາະກະສັດເຮໂຣດສັ່ງຄົນໄປຈັບໂຢຮັນແລະຂັງລາວໄວ້ໃນຄຸກ,
ດ້ວຍເຫດຈາກນາງເຮໂຣເດັຽ(ເມັຽຂອງຟີລິບນ້ອງຊາຍຂອງເຂົາ) ທີ່ເຮໂຣດແຕ່ງງານນຳ.
[18]ໂຢຮັນບັບຕິສະໂຕໄດ້ບອກກັບ ເຮໂຣດ ວ່າ,
"ບໍ່ຖືກຕ້ອງທີ່ທ່ານຈະເອົານ້ອງໃພ້ຂອງທ່ານມາເປັນເມັຽ."[19]ດັ່ງນັ້ນນາງເຮໂຣເດັຽຈຶ່ງຄຽດແຄ້ນໃຫ້ໂຢຮັນແລະຕ້ອງການຂ້າລາວ:
ແຕ່ນາງເຮັດບໍ່ໄດ້,[20]ຍ້ອນເຮໂຣດຢ້ານຢຳໂຢຮັນ, ເພາະວ່າໂຢຮັນເປັນຄົນດີແລະ ບໍຣິສຸດສັດຊື່. ເຮໂຣດຈຶ່ງປ້ອງກັນລາວໄວ້.
ແມ່ນເຮໂຣດບໍ່ພໍໃຈໃນສິ່ງທີ່ໂຢຮັນເວົ້າ ແຕ່ເຖິງປານນັ້ນ ເພິ່ນກໍຍອມຟັງດ້ວຍຄວາມຍິນດີ.
[21]ກໍເປັນວັນທີ່ໄດ້ໂອກາດ ໃນວັນສະຫລອງວັນເກີດຂອງກະສັດເຮໂຣດ ເພິ່ນໄດ້ເຊີນບັນດາຂ້າຣາຊະການຂັ້ນສູງມາຮ່ວມບັນດາ
ນາຍທະຫານໃນກອງທັບ, ຕະຫລອດທັງ ບຸກຄົນສຳຄັນຕ່າງໆໃນແຂວງຄາລີເລ.[22]ລູກສາວ ຂອງນາງເຮໂຣເດຍ ໄດ້ເຂົ້າມາໃນງານລ້ຽງ ແລະ
ຟ້ອນ ຕໍ່ຫນ້າຄົນທັງຫລາຍ, ກະສັດເຮໂຣດ ແລະ ແຂກທີ່ມາໃນງານ ພໍໃຈ. ກະສັດເຮໂຣດ ຈຶ່ງກ່າວແກ່ນາງວ່າ,"ເຈົ້າຢາກໄດ້ສິ່ງໃດຈົ່ງຂໍມາ?
ເຮົາຈະໃຫ້ສິ່ງນັ້ນ."
[23]ແລ້ວເຮໂຣດກໍສັນຍາກັບນາງວ່າ,
"ເຈົ້າຈົ່ງຂໍຫຍັງກໍໄດ້ທີ່ເຈົ້າຕ້ອງການເຮົາຈະໃຫ້ຈະຂໍເຄິ່ງຫນຶ່ງຂອງອານາຈັກຂອງເຮົາກໍໄດ້."[24]ແລ້ວນາງຈຶ່ງອອກໄປຖາມແມ່ຂອງຕົນວ່າ,"ຈະຂໍສິ່ງໃດດີ?"ແມ່ຈຶ່ງຕອ
"ຂໍຫົວຂອງໂຢຮັນບັບຕິສະໂຕ".[25]ນາງຈຶ່ງກັບຄືນໄປຫາກະສັດທັນທີ ແລະເວົ້າວ່າ,
"ຂ້ານ້ອຍຕ້ອງການເອົາຫົວຂອງໂຢຮັນບັບຕິສະໂຕໃສ່ຖາດມາໃຫ້ຂ້ານ້ອຍດຽວນີ້."
[26]ເມື່ອກະສັດໄດ້ຍິນກໍເປັນທຸກໃຈ, ແຕ່ເພິ່ນໄດ້ສັນຍາໄວ້ກັບນາງແລ້ວ ຕໍ່ຫນ້າ ບັນດາແຂກທັງຫມົດທ່ານຈຶ່ງບໍ່ສາມາດປະຕິເສດຄຳຂໍຂອງນາງໄດ້.
[27]ເພິ່ນຈຶ່ງສັ່ງທະຫານ ຍາມໃຫ້ອອກໄປ ແລະ ນຳເອົາຫົວຂອງໂຢຮັນເຂົ້າມາ, ທະຫານຈຶ່ງໄປທີ່ຄຸກ ແລະ ຕັດຫົວຂອງໂຢຮັນ.
[28]ເຂົານຳຫົວຂອງໂຢຮັນໃສ່ຖາດເຂົ້າມາມອບໃຫ້ແກ່ນາງ ແລະ ນາງກໍນຳໄປໃຫ້ແມ່ຂອງຕົນ.[29]ເມື່ອພວກສິດຂອງໂຢຮັນຮູ້ຂ່າວນີ້,
ກໍເຂົ້າມາຮັບຮ່າງຂອງເພິ່ນເພື່ອນຳໄປຝັງໄວ້ໃນອຸໂມງ.
[30]ແລ້ວອັກຄະສາວົກໄດ້ກັບມາຫາ ພຣະເຢຊູເຈົ້າແລ້ວເລົ່າທຸກສິ່ງທີ່ພວກຕົນໄດ້ເຮັດແລະໄດ້ສັ່ງສອນ[31]ແລະພຣະອົງໄດ້ ກ່າວແກ່ພວກເຂົາວ່າ
"ຈົ່ງແຍກກັນອອກໄປບ່ອນມິດງຽບເພື່ອໃຫ້ພວກເຈົ້າ ພັກຜ່ອນ ຈັກຄາວຫນຶ່ງ." ເພາະມີຄົນຫລວງຫລາຍໄປໆມາໆ ແລະ
ພວກເຂົາບໍ່ມີເວລາແມ່ນຈະກິນເຂົ້າ.[32]ສະນັ້ນພຣະເຢຊູເຈົ້າກັບພວກສາວົກຈຶ່ງຂຶ້ນເຮືອອອກໄປບ່ອນທີ່ມິດງຽບຕ່າງຫາກ.
[33]ແຕ່ປະຊາຊົນຫລາຍຄົນເຫັນ ພຣະເຢຊູເຈົ້າກັບພວກສາວົກອອກໄປແລະພວກເຂົາຈື່ສາວົກໄດ້. ປະຊາຊົນຈາກເມືອງຕ່າງໆ,
ຈຶ່ງເດີນທາງຢ່າງໄປລ່ວງຫນ້າກ່ອນ ພຣະເຢຊູເຈົ້າກັບພວກສາວົກຈະໄປເຖິງນັ້ນ.
[34]ເມື່ອພຣະເຢຊູເຈົ້າກັບສາວົກມາເຖິງຝັ່ງກໍເຫັນປະຊາຊົນຫມູ່ໃຫຍ່ຖ້າຢູ່ ແລະພຣະອົງ
ສົງສານພວກເຂົາເພາະພວກເຂົາເປັນເຫມືອນຝູງແກະທີ່ບໍ່ມີຜູ້ລ້ຽງ. ສະນັ້ນພຣະອົງຈຶ່ງຕັ້ງຕົ້ນ ສັ່ງສອນພວກເຂົາຫລາຍເລື່ອງ.
[35]ຄ້າຍຄ່ຳມາແລ້ວ, ພວກສາວົກກໍເຂົ້າມາຫາພຣະເຢຊູເຈົ້າ ແລະ ໄດ້ເວົ້າວ່າ, "ພຣະອົງເອີຍຕອນນີ້ກໍຄ່ຳແລ້ວເດ ແລະ ທີ່ນີ້ກໍເປັນປ່າ.
[36]ໃຫ້ປະຊາຊົນເລີກເມືອຍັງເມືອງ ຫລື ຫມູ່ບ້ານໃກ້ໆເພື່ອຈະຫາຊື້ອາຫານກິນຕາມບ້ານແຖບນີ້ສາ."
[37]ແຕ່ພຣະອົງຕອບພວກເຂົາວ່າ, "ພວກເຈົ້າຈົ່ງຫາອາຫານໃຫ້ພວກເຂົາກິນສາ." ພວກສາວົກຕອບພຣະອົງວ່າ,
"ເຮົາຈະເອົາເງິນໄປຫາຊື້ອາຫານລາຄາເຖິງ ສອງຮ້ອຍຫລຽນເງິນ ໃຫ້ພວກເຂົາກິນບໍ?"[38]ດັ່ງນັ້ນພຣະເຢຊູເຈົ້າຈຶ່ງຖາມພວກເພິ່ນ
ວ່າ,"ພວກເຈົ້າມີເຂົ້າຈີ່ຈັກກ້ອນ? ຈົ່ງໄປເບິ່ງດູ?." ເມື່ອພວກເພິ່ນໄປຊອກເບິ່ງແລ້ວກໍມາບອກ ພຣະເຢຊູເຈົ້າວ່າ,
"ມີເຂົ້າຈີ່ຫ້າກ້ອນກັບປາສອງໂຕ."
[39]ແລ້ວພຣະອົງກໍບອກປະຊາຊົນນັ່ງລົງລວມເຂົ້າກັນໃຫ້ເປັນຫມູ່ໆ ນັ່ງລົງຕາມທົ່ງຫຍ້າ.[40]ພວກເຂົາຈຶ່ງນັ່ງລົງເປັນກຸ່ມ; ກຸ່ມລະຮ້ອຍຄົນ ແລະ
ກຸ່ມລະຫ້າສິບ ຄົນ.[41]ເມື່ອພຣະອົງຈັບເອົາເຂົ້າຈີ່ຫ້າກ້ອນ ແລະ ປາສອງໂຕນັ້ນ, ແລະເງີຍຫນ້າຂຶ້ ສູ່ສະຫວັນໂມທະນາຂອບພຣະຄຸນພຣະເຈົ້າ
ແລ້ວຫັກເຂົ້າຈີ່ຍື່ນໃຫ້ພວກສາວົກນຳໄປແຈກຢາຍແກ່ປະຊາຊົນ. ພຣະອົງຍັງໄດ້ແບ່ງປັນປາສອງໂຕໃຫ້ພວກເຂົາທັງຫລາຍດ້ວຍ.

42ພວກເຂົາໄດ້ກິນຈົນກວ່າທຸກຄົນໄດ້ອີ່ມເຕັມ. 43ພວກສາວົກກໍເກັບເສດເຂົ້າຈີ່, ແລະ ປາທີ່ເຫລືອໄດ້ທັງຫມົດສິບສອງກະບຸງ. 44ໃນວັນນັ້ນ
ມີຜູ້ຊາຍຫ້າພັນຄົນທີ່ໄດ້ກິນເຂົ້າຈີ່.
45ແລ້ວພຣະເຢຊູເຈົ້າໃຫ້ ບັນດາພວກສາວົກລົງຂີ່ເຮືອທັນທີ ແລະ ຂ້ວາມຟາກລ່ວງຫນ້າພຣະອົງໄປເມືອງເບັດສາອີດາ, ໃນຂະນະທີ່ພຣະອົງ
ຄອຍສົ່ງປະຊາຊົນໃຫ້ເລີກເມືອ. 46ເມື່ອພວກສາວົກອອກໄປແລ້ວ, ພຣະອົງໄດ້ຂຶ້ນໄປເທິງພູເຂົາເພື່ອພາວັນນາອະທິຖານ. 47ຄ່ຳມາແລ້ວ, ແລະ
ພວກສາວົກໄດ້ຂີ່ເຮືອໄປນັ້ນກໍຢູ່ກາງທະເລ, ສ່ວນພຣະອົງຍັງຢູ່ທີ່ພູເຂົາຕາມລຳພັງ.
48ເມື່ອພຣະອົງເຫັນວ່າພວກເຂົາພາຍເຮືອ ໄປໄດ້ດ້ວຍຄວາມຍາກລຳບາກຫລາຍເພາະເຮືອຕ້ານທວນລົມຢູ່, ເວລາປະມານຂ້ອນແຈ້ງພຣະອົງ
ຈຶ່ງຍ່າງເທິງຫນ້ານ້ຳ ແລະ ກຳລັງຈະຜ່ານພວກເຂົາ. 49ແຕ່ເມື່ອພວກສາວົກ ເຫັນພຣະອົງຍ່າງເທິງຫນ້ານ້ຳກໍຄິດວ່າເປັນຜີຈຶ່ງຮ້ອງຕົກໃຈ,
50ເພາະສາວົກໄດ້ເຫັນພຣະອົງຕ່າງກໍຢ້ານກົວ. ພວກເຂົາພາກັນຮ້ອງຕົກໃຈໃນທັນໃດນັ້ນພຣະເຢຊູເຈົ້າກ່າວວ່າ,
“ຢ່າຢ້ານເລີຍແມ່ນເຮົາເອງຢ່າສູ່ຢ້ານ!"
51ພຣະອົງກໍລົງໄປໃນເຮືອຫາພວກເພິ່ນ, ແລະ ລົມກໍງຽບລົງ. ພວກສາວົກປະຫລາດໃຈໃນສິ່ງອັດສະຈັນ.
52ເພາະພວກເພິ່ນບໍ່ເຂົ້າໃຈຄວາມຫມາຍ ອັນແທ້ຈິງເລື່ອງເຂົ້າຈີ່, ແລະ ຫົວໃຈຂອງພວກເພິ່ນ ຍັງແຂງກະດ້າງ ແລະ ປົກຕັນຢູ່.
53ເມື່ອພຣະເຢຊູເຈົ້າ ແລະ ພວກສາວົກໄດ້ຂ້ວາມຟາກມາເຖິງທ່າເມືອງເຄັນເນຊາເຣັດ ກໍຈອດເຮືອໄວ້. 54ເມື່ອພວກເຂົາຂຶ້ນຈາກເຮືອ,
ປະຊາຊົນກໍຮູ້ຈັກວ່າແມ່ນພຣະເຢຊູເຈົ້າ. 55ແລະ ພວກເຂົາຈຶ່ງຮີບຟ້າວເຂົ້າໄປໃນເມືອງ ແລະ ບ່ອນໃດກໍຕາມທີ່ໄດ້ຍິນວ່າພຣະອົງຢູ່
ພວກເຂົາກໍນຳເອົາຄົນເຈັບປ່ວຍໃສ່ບ່ອນນອນຫາມມາຫາພຣະອົງ.
56ເມື່ອພຣະອົງສະເດັດເຂົ້າໄປທີ່ຫມູ່ບ້ານ, ເມືອງ ຫລື ແຂວງໃດ, ຫລື ປະເທດໃດ,
ຄົນເຫລົ່ານັ້ນຈະເອົາຄົນເຈັບປ່ວຍມາວາງໄວ້ຕາມແຄມທາງບ່ອນຊຸມຊົນ.
ພວກເຂົາໃຫ້ຄົນເຈັບປ່ວຍເຫລົ່ານັ້ນໄດ້ບາຍແຕ່ແຄມເຄື່ອງນຸ່ງຫົ່ມຂອງພຣະອົງ, ແລະຄົນຈຳນວນຫລາຍໄດ້ບາຍແຄມເສື້ອພຣະອົງ
ກໍຖືກໂຜດໃຫ້ດີພະຍາດທຸກຄົນ.

7 [1]ພວກຟາຣີຊາຍ ແລະ ພວກທັມະຈານບາງຄົນຊຶ່ງມາຈາກນະຄອນເຢຣູຊາເລັມພາກັນມາຢືນອ້ອມຮອບພຣະເຢຊູເຈົ້າ.

[2]ພວກເຂົາໄດ້ເຫັນວ່າພວກສາວົກຂອງພຣະອົງໄດ້ກິນເຂົ້າ ດ້ວຍມືທີ່ເປື້ອນໂດຍບໍ່ໄດ້ລ້າງມື.[3](ເພາະພວກຟາຣີຊາຍ ແລະ
ຊາວຢິວທຸກຄົນປະຕິບັດຕາມຄຳສອນທີ່ສືບທອດມາຈາກບັນພະບຸຣຸດວ່າ ຖ້າບໍ່ລ້າງມືໃຫ້ສະອາດເສັຽກ່ອນພວກເຂົາກໍບໍ່ກິນສິ່ງໃດ;
[4]ເມື່ອພວກເຂົາມາຈາກຕະຫລາດ, ພວກເຂົາຈະບໍ່ຍອມກິນສິ່ງໃດຖ້າບໍ່ໄດ້ອາບນ້ຳເສັຽກ່ອນ. ແລະ
ຍັງມີກົດອື່ນໆອີກຫລາຍຢ່າງທີ່ພວກເຂົາປະຕິບັດຕາມຢ່າງເຄັ່ງຄັດເຊັ່ນວ່າ: ການລ້າງຖ້ວຍຊາມ, ຫມໍ້, ເຄື່ອງໃຊ້ ເປັນທອງແດງ ແລະ
ແມ່ນທັງໂຕະອາຫານ.)
[5]ພວກຟາຣີຊາຍ ແລະ ພວກທັມະຈານ ຈຶ່ງຖາມພຣະເຢຊູເຈົ້າວ່າ, "ເປັນຫຍັງສາວົກຂອງທ່ານຈຶ່ງບໍ່ປະຕິບັດຕາມທຳນຽມມາຈາກ ບັນພະບຸຣຸດ,
ດ້ວຍການບໍ່ລ້າງມືກ່ອນກິນອາຫານ?"
[6]ແຕ່ພຣະອົງຕອບພວກເຂົາວ່າ,"ເອຊາຢາ ໄດ້ທຳນວາຍໄວ້ເຖິງພວກທ່ານຄົນຫນ້າຊື່ໃຈຄົດ. ໄວ້ຖືກຕ້ອງແລ້ວວ່າ,'ຄົນພວກນີ້ໃຫ້ກຽດ
ເຮົາແຕ່ປາກ, ສ່ວນຈິດໃຈຫ່າງໄກຈາກເຮົາ.[7]ພວກເຂົານະມັດສະການເຮົານັ້ນຢ່າງບໍ່ມີປະໂຫຍດ.
ດ້ວຍວ່າພວກເຂົາສອນທຳນຽມຂອງມະນຸດແທນຫລັກຄຳສອນ ຂອງພຣະເຈົ້າ.'"
[8]ພວກເຈົ້າປະຖິ້ມພຣະບັນຍັດຂອງພຣະເຈົ້າ ແລະ
ຖືປະຕິບັດຕາມຄຳສອນທີ່ສືບທອດມາຈາກມະນຸດ."[9]ແລ້ວພຣະເຢຊູເຈົ້າກໍກ່າວກັບພວກເຂົາວ່າ,
"ທີ່ເຈົ້າທັງຫລາຍໄດ້ປະຖິ້ມກົດບັນຍັດຂອງພຣະເຈົ້າເພື່ອໄປຢ່າງງ່າຍດາຍເພື່ອຮັກສາທຳນຽມຂອງພວກເຈົ້າເອງ![10]ດ້ວຍໂມເຊໄດ້ກ່າວໄວ້ວ່າ,
'ຈົ່ງໃຫ້ກຽດແກ່ພໍ່ແມ່ຂອງຕົນ', ແລະ, 'ຜູ້ໃດກໍຕາມ ທີ່ກ່າວຮ້າຍຕໍ່ພໍ່ແມ່ຂອງຕົນຕ້ອງຖືກລົງໂທດເຖິງຕາຍ.'
[11]ແຕ່ພວກເຈົ້າກັບເວົ້າວ່າ,'ຖ້າຜູ້ໃດເວົ້າກັບບິດາມານດາວ່າ,
ສິ່ງໃດຂອງຂ້ອຍທີ່ອາດຊ່ວຍເຫລືອເຈົ້າໄດ້ສິ່ງນັ້ນເປັນໂກຣະບານ' (ຊຶ່ງຫມາຍເຖິງຂອງຖວາຍແກ່ພຣະເຈົ້າແລ້ວ),
[12]ເຈົ້າທັງຫລາຍຈຶ່ງບໍ່ອະນຸຍາດໃຫ້ຜູ້ນັ້ນຊ່ວຍເຫລືອ ພໍ່ແມ່ຂອງຕົນ.
[13]ທ່ານກຳລັງເຮັດໃຫ້ພຣະບັນຍັດຂອງພຣະເຈົ້າບໍ່ມີປະໂຫຍດໄປດ້ວຍຄຳສັ່ງສອນທີ່ຕາມທຳນຽມຊຶ່ງທ່ານຮັບຕໍ່ກັນມາ. ລວມທັງເລື່ອງອື່ນໆອີກທີ່
ພວກເຈົ້າເຮັດຜິດແບບນີ້."
[14]ພຣະເຢຊູເຈົ້າຊົງເອີ້ນປະຊາຊົນມາຫາພຣະອົງອີກເທື່ອຫນຶ່ງແລະກ່າວແກ່ພວກເຂົາ ວ່າ,"ເຈົ້າທັງຫລາຍຈົ່ງຟັງເຮົາເວົ້າແລະເຂົ້າໃຈເອົາ.
[15]ມະນຸດກິນເຂົ້າໄປແລ້ວຈະເຮັດໃຫ້ມະນຸດ ຊົ່ວມົວຫມອງ, ແຕ່ສິ່ງທີ່ອອກມາຈາກໃຈມະນຸດ
ຕ່າງຫາກທີ່ເຮັດໃຫ້ເຂົາຊົ່ວມົວຫມອງ."[16]ໃຜມີຫູຟັງ ຈົ່ງຟັງເອົາ.
[17]ເມື່ອພຣະເຢຊູເຈົ້າໄດ້ຈາກປະຊາຊົນ ແລະ ໄດ້ໄປໃນເຮືອນຫລັງຫນຶ່ງ, ພວກສາວົກໄດ້ຖາມພຣະອົງເຖິງເລື່ອງຄຳອຸປະມານັ້ນ.
[18]ພຣະເຢຊູເຈົ້າກ່າວວ່າ, "ພວກເຈົ້າຍັງບໍ່ເຂົ້າໃຈອີກບໍ? ພວກເຈົ້າບໍ່ເຫັນບໍ?
ວ່າສິ່ງໃດໆພາຍນອກທີ່ຄົນກິນເຂົ້າໄປບໍ່ອາດເຮັດໃຫ້ຊົ່ວມົວຫມອງໄດ້,[19]ເພາະສິ່ງນັ້ນບໍ່ໄດ້ ເຂົ້າໄປໃນຈິດໃຈ,
ແຕ່ເຂົ້າໄປໃນທ້ອງແລ້ວກໍຖ່າຍອອກມາ?." ການເວົ້າເຊັ່ນນີ້ ເທົ່າກັບພຣະເຢຊູເຈົ້າຮັບຮອງວ່າອາຫານທຸກຊະນິດເປັນຂອງສະອາດກິນໄດ້.
[20]ພຣະອົງກ່າວຕໍ່ໄປວ່າ, "ສິ່ງທີ່ອອກມາຈາກໃຈຂອງຄົນນັ້ນແຫລະ ທີ່ເຮັດໃຫ້ຊົ່ວມົວຫມອງ.[21]ເພາະຈາກພາຍໃນຕົນເອງ,
ຈາກຫົວໃຈຂອງເຂົາຈະຟ້ອງຄວາມຄິດຊົ່ວ, ການຜິດສີລະທັມທາງເພດ, ການລັກຂະໂມຍ, ການຂ້າຄົນ,[22]ການຫລິ້ນຊູ້ສູ່ຜົວເມັຽ, ຄວາມໂລບ,
ການຊົ່ວຮ້າຍ, ການຫລອກລວງ, ຣາຄະຕັນຫາ, ການອິດສາ, ການດູຫມິ່ນ, ນິນທາ, ການຈອງຫອງ ແລະການກະທຳໃນສິ່ງທີ່ໂງ່ຈ້າ,
ຫລັ່ງໄຫລອອກມາ[23]ຄວາມຊົ່ວເຫລົ່ານີ້ລ້ວນແຕ່ອອກມາຈາກພາຍໃນໃຈຄົນແລະ ເຮັດໃຫ້ຊົ່ວມົວຫມອງ."
[24]ພຣະອົງໄດ້ຈາກທີ່ນັ້ນໄປຍັງເຂດຫນຶ່ງໃກ້ກັບເມືອງຕີເຣ ແລະຊີໂດນ. ພຣະອົງ ໄດ້ເຂົ້າໄປໃນເຮືອນຫລັງຫນຶ່ງ ແລະ
ພຣະອົງບໍ່ຢາກໃຫ້ຜູ້ໃດຮູ້ວ່າພຣະອົງຢູ່ໃນທີ່ນັ້ນ, ແຕ່ພຣະອົງກໍບໍ່ສາມາດຊ້ອນຕົວໄວ້ໄດ້.[25]ແຕ່ໃນທັນໃດກໍມີຍິງຄົນຫນຶ່ງ,
ທີ່ລູກສາວຖືກຜີຊົ່ວຮ້າຍສິງ, ໄດ້ຍິນເຖິງເລື່ອງພຣະເຢຊູເຈົ້າຈຶ່ງເຂົ້າມາຫາ ແລະ ຂາບລົງທີ່ຕີນຂອງພຣະອົງ.[26]ຍິງຜູ້ນີ້
ເປັນຊາວກຣີກເຊື້ອສາຍຊີເຣັຽໃນໂຟນີເຊັຽ. ນາງອ້ອນວອນຂໍ ພຣະເຢຊູເຈົ້າໃຫ້ຂັບໄລ່ຜີຮ້າຍອອກຈາກລູກສາວຂອງນາງ.
[27]ພຣະອົງໄດ້ບອກລາວວ່າ, "ຈົ່ງໃຫ້ລູກໄດ້ກິນອີ່ມເສັຽກ່ອນ,
ເພາະບໍ່ເປັນການຖືກຕ້ອງທີ່ຈະເອົາອາຫານຂອງລູກໂຍນໃຫ້ແກ່ຫມາ."[28]ແຕ່ນາງຕອບພຣະອົງວ່າ, "ແມ່ນແລ້ວທ່ານເອີຍ,
ແຕ່ຫມາທີ່ຢູ່ກ້ອງໂຕະກໍຍັງໄດ້ກິນເສດອາຫານຂອງລູກ."
[29]ພຣະເຢຊູເຈົ້າກ່າວກັບນາງວ່າ, "ເພາະເຫດທີ່ເຈົ້າເວົ້າຢ່າງນີ້, ເຈົ້າຈົ່ງກັບເມືອເຮືອນສາ.
ຜີມານຮ້າຍໄດ້ອອກຈາກລູກສາວຂອງເຈົ້າແລ້ວ."[30]ນາງຈຶ່ງກັບເມືອເຮືອນຂອງຕົນ ແລະ ເຫັນລູກສາວນອນຢູ່ເທິງບ່ອນນອນ, ແລະ
ຜີມານຮ້າຍໄດ້ອອກໄປແລ້ວ.
[31]ແລ້ວພຣະອົງໄດ້ສະເດັດອອກຈາກເມືອງຕີເຣ, ແລະ ຜ່ານໄປທາງເມືອງຊີໂດນຈົນເຖິງທະເລຄາລີເລຂຶ້ນໄປທາງຂົງເຂດເດກາໂປລີ.
[32]ພວກເຂົາໄດ້ນຳຄົນຫູຫນວກປາກກືກມາຫາພຣະເຢຊູເຈົ້າ, ແລະ ພວກເຂົາຂໍຮ້ອງພຣະອົງໃຫ້ວາງມືໃສ່ລາວ.
[33]ພຣະອົງຈຶ່ງພາເຂົາອອກໄປຫ່າງຈາກປະຊາຊົນຢູ່ຕ່າງຫາກ, ແລ້ວພຣະອົງ ກໍໃຊ້ນິ້ວມືແຍ່ຫູຊາຍຄົນນີ້, ແລະ
ເມື່ອຖົ່ມນ້ຳລາຍແລ້ວຈຶ່ງເອົານິ້ວແປະໃສ່ລີ້ນຂອງເຂົາ.[34]ແລ້ວພຣະອົງກໍເງີຍຫນ້າຂຶ້ນສູ່ສະຫວັນ, ຊົງຖອນຫາຍໃຈແລ້ວເວົ້າກັບເຂົາວ່າ,
"ເອຟາທາ" ຊຶ່ງຫມາຍຄວາມວ່າ, "ຈົ່ງໄຂອອກ!"[35]ແລະ ທັນໃດນັ້ນຫູຂອງເຂົາກໍເປີດອອກ, ແລະ ສິ່ງທີ່ຂັດລີ້ນຂອງເຂົາກໍຫລຸດອອກ ແລະ
ເຂົາຈຶ່ງເວົ້າໄດ້.
[36]ພຣະເຢຊູເຈົ້າກໍໄດ້ສັ່ງປະຊາຊົນບໍ່ໃຫ້ບອກເລື່ອງນີ້ແກ່ຜູ້ໃດ. ແຕ່ຍິ່ງພຣະອົງສັ່ງຫ້າມພວກເຂົາ, ກໍຍິ່ງປ່າວປະກາດໃຫ້ຄົນຟັງໄປທົ່ວ.
[37]ພວກເຂົາປະຫລາດໃຈຫລາຍທີ່ສຸດ, ຈຶ່ງເວົ້າກັນວ່າ, "ພຣະອົງຊົງເຮັດທຸກສິ່ງລ້ວນແຕ່ເປັນການດີ, ແມ່ນແຕ່ຄົນຫູຫນວກກໍເຮັດໃຫ້ໄດ້ຍິນ
ແລະຄົນປາກກືກກໍເຮັດໃຫ້ເວົ້າໄດ້."

# 8

[1]ໃນຊ່ວງເວລາຫລາຍມື້ນັ້ນ, ມີປະຊາຊົນກຸ່ມໃຫຍ່, ແລະ ພວກເຂົາບໍ່ມີອາຫານກິນ. ພຣະເຢຊູເຈົ້າຈຶ່ງເອີ້ນພວກສາວົກຂອງພຣະອົງມາ
ແລະກ່າວກັບພວກເຂົາວ່າ,[2]“ເຮົາສົງສານຄົນເຫລົ່ານີ້ຫລາຍ, ເພາະພວກເຂົາຢູ່ນຳເຮົາຕະຫລອດສາມວັນແລ້ວແລະ ພວກເຂົາບໍ່ມີອາຫານກິນ.
[3]ຖ້າຫາກເຮົາປ່ອຍພວກເຂົາກັບບ້ານໄປໂດຍທີ່ບໍ່ໄດ້ກິນຫຍັງ, ພວກເຂົາກໍຄົງເມື່ອຍອິດອ່ອນຕາມທາງ. ແລະ
ພວກເຂົາບາງຄົນກໍເດີນທາງມາແຕ່ໄກດ້ວຍ.”[4]ພວກສາວົກຈຶ່ງຕອບພຣະອົງວ່າ,
“ຢູ່ໃນບ່ອນປ່ຽວເຊັ່ນນີ້ເຮົາຈະໄປຫາອາຫານມາແຕ່ໃສພໍເພື່ອຈະລ້ຽງດູຄົນທັງຫມົດນີ້ໄດ້?”

[5]ພຣະອົງເຈົ້າຖາມພວກເຂົາວ່າ, “ພວກເຈົ້າມີເຂົ້າຈີ່ຈັກກ້ອນ?” ພວກເຂົາຕອບວ່າມີ “ເຈັດກ້ອນ”.[6]ພຣະອົງຈຶ່ງສັ່ງປະຊາຊົນໃຫ້ນັ່ງລົງທີ່ພື້ນ.
ແລ້ວພຣະອົງກໍຈັບເອົາເຂົ້າຈີ່ທັງເຈັດກ້ອນຂຶ້ນມາ,
ໂມທະນາຂອບພຣະຄຸນແລ້ວຫັກເຂົ້າຈີ່ແຈກຈ່າຍໃຫ້ກັບພວກສາວົກນຳໄປແຈກຢາຍແກ່ປະຊາຊົນ.
[7]ພວກເຂົາມີປານ້ອຍສອງສາມໂຕດ້ວຍ, ແລະ ຫລັງຈາກພຣະເຢຊູເຈົ້າອະທິຖານຂອບພຣະຄຸນສຳລັບປານ້ອຍເຫລົ່ານັ້ນ.
ພຣະອົງສັ່ງໃຫ້ພວກສາວົກເອົາປາໄປແຈກຢາຍໃຫ້ປະຊາຊົນເຊັ່ນກັນ.[8]ພວກເຂົາໄດ້ກິນອາຫານ ແລະ ອີ່ມທ້ອງ,
ພວກສາວົກໄດ້ໄປເກັບເອົາຕ່ອນທີ່ເຫລືອໄດ້ເຈັດກະບຸງໃຫຍ່.[9]ມີປະຊາຊົນປະມານສີ່ພັນຄົນ. ແລ້ວພຣະເຢຊູເຈົ້າກໍສັ່ງໃຫ້ພວກເຂົາກັບໄປ.
[10]ຈາກນັ້ນພຣະອົງຈຶ່ງຊົງລົງເຮືອໄປກັບພວກສາວົກເພື່ອໄປຍັງແຄ້ວນດານມານູທາທັນທີ.
[11]ແລ້ວພວກຟາຣີຊາຍອອກມາຫາພຣະເຢຊູເຈົ້າ ແລະ ເລີ່ມໂຕ້ຖຽງກັບພຣະອົງ. ພວກເຂົາເສາະຫາຫມາຍສຳຄັນຈາກສະຫວັນ,
ເພື່ອທົດສອບພຣະອົງ.[12]ພຣະເຢຊູເຈົ້າຊົງຖອນຫາຍໃຈເລິກໃນພຣະວິນຍານຂອງພຣະອົງ ແລະ ໄດ້ຖາມວ່າ,
“ເປັນຫຍັງຄົນສະໄຫມນີ້ຈຶ່ງສະແຫວງຫາຫມາຍສຳຄັນ? ແຕ່ເຮົາບອກເຈົ້າຕາມຄວາມຈິງວ່າ,
ຈະບໍ່ມີການປຣະທານຫມາຍສຳຄັນໃຫ້ຄົນສະໄຫມນີ້ໄດ້ເຫັນ.”[13]ຈາກນັ້ນ ພຣະອົງຈຶ່ງສະເດັດຈາກພວກເຂົາໄປ, ແລ້ວສະເດັດລົງເຮືອ,
ຂ້ວາມທະເລສາບໄປຟາກອື່ນອີກ.
[14]ໃນເວລານີ້ພວກສາວົກລືມເອົາເຂົ້າຈີ່ມາພ້ອມກັບພວກເພິ່ນ. ພວກເຂົາມີເຂົ້າຈີ່ແຕ່ກ້ອນດຽວເທົ່ານັ້ນຢູ່ໃນເຮືອ.[15]ພຣະອົງໄດ້ເຕືອນພວກເພິ່ນວ່າ,
“ຈົ່ງເຝົ້າເບິ່ງ ແລະ ຣະວັງເຊື້ອແປ້ງຂອງພວກຟາຣີຊາຍ ແລະ ເຊື້ອແປ້ງຂອງເຮໂຣດ.”
[16]ພວກສາວົກຕ່າງໆໃຫ້ເຫດຜົນຕໍ່ກັນວ່າ, “ນີ້ເປັນເພາະພວກເຮົາບໍ່ມີເຂົ້າຈີ່ມານຳ.”[17]ພຣະເຢຊູເຈົ້າຮູ້ສິ່ງນີ້ຈຶ່ງເວົ້າກັບພວກເພິ່ນວ່າ
“ດ້ວຍເຫດໃດພວກເຈົ້າຈຶ່ງເວົ້າກັນເຖິງ ເລື່ອງບໍ່ມີເຂົ້າຈີ່? ພວກເຈົ້າຍັງເບິ່ງບໍ່ເຫັນບໍ? ພວກເຈົ້າຍັງບໍ່ເຂົ້າໃຈຫລືຢ່າງໃດ? ຫົວໃຈ
ຂອງພວກເຈົ້າມືດບອດໄປແລ້ວແມ່ນບໍ?
[18]ພວກເຈົ້າມີຕາ, ແຕ່ເບິ່ງບໍ່ເຫັນບໍ? ພວກເຈົ້າມີຫູແຕ່ຟັງບໍ່ໄດ້ຍິນບໍ? ພວກເຈົ້າຈື່ໄດ້ແມ່ນບໍ?[19]ເມື່ອເຮົາຫັກເຂົ້າຈີ່ຫ້າກ້ອນລ້ຽງຫ້າພັນຄົນນັ້ນ,
ພວກເຈົ້າເກັບເສດເຂົ້າຈີ່ທີ່ເຫລືອນັ້ນໄດ້ເຕັມຈັກກະບຸງ?”ພວກເຂົາຕອບ ວ່າ,“ສິບສອງກະບຸງ”.
[20]"ເມື່ອເຮົາຫັກເຂົ້າຈີ່ເຈັດກ້ອນທ່າມກາງຄົນສີ່ພັນຄົນ, ພວກທ່ານເກັບເສດເຂົ້າຈີ່ທີ່ເຫລືອ ໄດ້ເຕັມທັງຫມົດຈັກກະບຸງ?" ພວກເຂົາຕອບວ່າ
"ເຈັດກະບຸງ ".[21]ພຣະອົງກ່າວວ່າ,“ພວກເຈົ້າຍັງບໍ່ເຂົ້າໃຈຢູ່ບໍ?”
[22]ພວກເຂົາໄດ້ມາທີ່ເບັດສາອີດາ. ຜູ້ຄົນທີ່ນັ້ນໄດ້ພາຄົນຕາບອດມາຫາ ແລະພຣະເຢຊູເຈົ້າແລະ ຂໍຮ້ອງພຣະອົງໃຫ້ວາງມືໃສ່ລາວ.
[23]ພຣະເຢຊູເຈົ້າຈູງຄົນຕາບອດອອກໄປນອກຫມູ່ບ້ານ, ພຣະອົງບ້ວນນ້ຳລາຍໃສ່ຕາຂອງເຂົາ
ແລະວາງມືຂອງພຣະອົງເທິງເຂົາພຣະອົງຖາມເຂົາວ່າ, “ເຈົ້າເບິ່ງເຫັນຫຍັງແດ່ບໍ?”
[24]ເຂົາເງີຍຫນ້າຂຶ້ນ ແລະ ຕອບວ່າ,“ຂ້ານ້ອຍເຫັນຄົນ ເບິ່ງຄືຕົ້ນໄມ້ຍ່າງໄປມາໄດ້.”[25]ຈາກນັ້ນພຣະອົງຈຶ່ງວາງມືເທິງດວງຕາຂອງເຂົາອີກເທື່ອ,
ແລະ ເຂົາກໍມືນຕາເຕັມຫນ່ວຍ, ແລະ ສາຍຕາຂອງລາວກໍດີເປັນປົກກະຕິ, ແລະ ເຂົາຈຶ່ງເຫັນທຸກຢ່າງໄດ້ຈະແຈ້ງດີ.
[26]ພຣະເຢຊູເຈົ້າບອກເຂົາກັບບ້ານຂອງເຂົາພ້ອມທັງສັ່ງວ່າ, “ຢ່າເຂົ້າໄປໃນເມືອງ.”
[27]ພຣະເຢຊູເຈົ້າອອກໄປກັບພວກສາວົກ ໄດ້ໄປໃນເຂດເມືອງກາຍຊາເຣັຽ ຟີລິບປອຍ. ໃນລະຫວ່າງທາງໄປນັ້ນພຣະອົງໄດ້ຖາມພວກສາວົກວ່າ,
“ຜູ້ຄົນເວົ້າກັນວ່າເຮົາເປັນຜູ້ໃດ?”[28]ພວກສາວົກຈຶ່ງຕອບວ່າ“ບາງຄົນເວົ້າວ່າ ທ່ານແມ່ນໂຢຮັນບັບຕິສະໂຕ, ບາງຄົນເວົ້າວ່າ ທ່ານແມ່ນເອລີຢາ,
ສ່ວນຄົນອື່ນອີກເວົ້າວ່າ ທ່ານເປັນຫນຶ່ງໃນຜູ້ທຳນວາຍ.”
[29]ພຣະອົງຖາມພວກເພິ່ນວ່າ“ແຕ່ພວກເຈົ້າເດເວົ້າວ່າເຮົາເປັນໃຜ?”ເປໂຕຕອບພຣະອົງວ່າ, “ພຣະອົງເປັນພຣະຄຣິດ”[30]ແລ້ວ
ພຣະເຢຊູເຈົ້າເຕືອນບໍ່ໃຫ້ພວກເຂົາບອກຜູ້ໃດ ກ່ຽວກັບເລື່ອງຂອງພຣະອົງ.
[31]ພຣະເຢຊູເຈົ້າເລີ່ມຕົ້ນສອນພວກສາວົກວ່າ, ບຸດມະນຸດຈະຕ້ອງຖືກທົນທຸກ ທໍຣະມານຫລາຍປະການ, ແລະ
ຈະຕ້ອງຖືກປະຕິເສດຈາກຜູ້ປົກຄອງ ພວກຫົວຫນ້າປະໂລຫິດ ແລະ ພວກທັມະຈານ, ແລະ ຈະຂ້າເພິ່ນເສັຽ,
ແຕ່ໃນວັນຖ້ວນສາມພຣະອົງຈະຖືກບັນດານໃຫ້ເປັນຄືນມາ.”[32]ພຣະອົງໄດ້ກ່າວເລື່ອງນີ້ສູ່ ພວກເພິ່ຟັງຈະແຈ້ງ. ດັ່ງນັ້ນ
ເປໂຕຈຶ່ງເວົ້າກັບພຣະອົງເປັນການສ່ວນຕົວ. ເລີ່ມຫ້າມພຣະອົງບໍ່ໃຫ້ເວົ້າເລື່ອງນີ້.
[33]ແຕ່ພຣະເຢຊູເຈົ້າຫັນຫນ້າມາເບິ່ງພວກສາວົກຂອງພຣະອົງ ແລະ ຕຳຫນິເປໂຕ ຢ່າງຮຸນແຮງວ່າ, “ຈົ່ງຖອຍຫນີຈາກເຮົາສາ, ຊາຕານເອີຍ!
ເພາະເຈົ້າບໍ່ໄດ້ຄິດຢ່າງພຣະເຈົ້າແຕ່ຄິດຢ່າງມະນຸດ.”[34]ຈາກນັ້ນພຣະອົງກໍເອີ້ນ
ປະຊາຊົນກັບພວກສາວົກຂອງພຣະອົງມາຢູ່ຮ່ວມກັນແລະກ່າວວ່າ, “ຖ້າຜູ້ໃດຕ້ອງການຕິດຕາມເຮົາຜູ້ນັ້ນ, ຕ້ອງຕັດສິດຂອງຕົນເສັຽ ແລະ
ແບກໄມ້ກາງແຂນຂອງຕົນ ແລະຕາມເຮົາມາ.
[35]ເພາະຜູ້ໃດກໍຕາມທີ່ຕ້ອງການຮັກສາຊີວິດຂອງຕົນໃຫ້ພົ້ນ, ຜູ້ນັ້ນຈະສູນເສັຽຊີວິດນັ້ນ,
ແຕ່ຜູ້ໃດທີ່ຍອມສູນເສັຽຊີວິດເພື່ອຜົນປະໂຫຍດຂອງເຮົາ ແລະ ເພື່ອຂ່າວປະເສີດ, ຜູ້ນັ້ນກໍຈະຖືກຊ່ວຍຊີວິດໃຫ້ພົ້ນໄດ້.
[36]ຈະເກີດປະໂຫຍດອັນໃດ. ຖ້າຜູ້ໃດຈະໄດ້ສິ່ງຂອງຫມົດທັງໂລກ ແຕ່ຕອ້ງສູນເສັຽຊີວິດນິຣັນດອນຂອງຕົນ,[37]ບໍ່ມີສິ່ງໃດທີ່ມະນຸດນຳມາ
ແລກເອົາຊີວິດຂອງຕົນຄືນໄດ້.

38 ຜູ້ໃດກໍຕາມມີຄວາມລະອາຍເພາະເຮົາ ແລະ ເພາະຖ້ອຍຄຳຂອງເຮົາໃນທ່າມກາງຊົນຊາດນີ້, ແລະ
ໃນຍຸກທີ່ເຕັມໄປດ້ວຍຄວາມບາບການຫລິ້ນຊູ້ ແລະ ຄົນທີ່ມີບາບກັມ ບຸດມະນຸດກໍຈະມີຄວາມລະອາຍໃນ ເລື່ອງຄົນນັ້ນເມື່ອ
ພຣະອົງມາປາກົດໃນສະຫງ່າຣາສີແຫ່ງ ພຣະບິດາເຈົ້າ ແລະ ພ້ອມດ້ວຍບັນດາທູດສະຫວັນອັນບໍຣິສຸດ.”

 generated on Tue Jun 17 19:01:42 2025

9 1ພຣະອົງຍັງກ່າວແກ່ພວກເພິ່ນອີກວ່າ, “ເຮົາບອກຄວາມຈິງແກ່ພວກເຈົ້າວ່າ, ບາງຄົນໃນພວກເຈົ້າທີ່ຢືນຢູ່ທີ່ນີ້ຈະບໍ່ຮູ້ຣົດຊາດຂອງຄວາມຕາຍ
ຈົນກວ່າຈະໄດ້ເຫັນຣາຊະອານາຈັກຂອງພຣະເຈົ້າມາຕັ້ງຢູ່ດ້ວຍຣິດອຳນາດ.” 2ຫົກວັນຕໍ່ມາ, ພຣະເຢຊູເຈົ້າໄດ້ພາເປໂຕ, ແລະ ຢາໂກໂບ
ແລະ ໂຢຮັນ ຂຶ້ນໄປເທິງພູເຂົາສູງ, ຕາມລຳພັງ. ແລ້ວພຣະອົງນັ້ນໄດ້ປະກົດຕົວຕໍ່ຫນ້າພວກເຂົາ. 3ເຄື່ອງນຸ່ງຂອງພຣະອົງ
ກໍເກີດຄວາມຮຸ່ງເຮືອງຂາວເຫຼື້ອມໃສ, ຈົນບໍ່ມີຜູ້ໃດໃນໂລກນີ້ຊັກໃຫ້ຂາວເຊັ່ນນັ້ນໄດ້.

4ຫລັງຈາກນັ້ນເອລີຢາ ກັບໂມເຊກໍປາກົດແກ່ສາວົກ, ແລະ ພວກເຂົານັ້ນກຳລັງເວົ້າກັນຢູ່ກັບພຣະເຢຊູເຈົ້າ. 5ເປໂຕຈຶ່ງຕອບ ແລະ
ທູນພຣະເຢຊູເຈົ້າວ່າ, “ພຣະອາຈານເອີຍ, ຊ່າງເປັນການດີແທ້ໆທີ່ພວກຂ້ານ້ອຍຢູ່ບ່ອນນີ້, ແລະ ຂໍໂຜດໃຫ້ພວກຂ້ານ້ອຍ ປຸກຕູບສາມຫລັງຂຶ້ນ,
ຫລັງຫນຶ່ງສຳລັບທ່ານ, ຫລັງຫນຶ່ງສຳລັບໂມເຊ ແລະ ຫລັງຫນຶ່ງ ສຳລັບເອລີຢາ.” 6(ພວກເຂົາຢ້ານຈົນຕົວສັ່ນ ທີ່ລາວເວົ້າເຊັ່ນນັ້ນ,
ເພາະບໍ່ຮູ້ວ່າຈະເວົ້າຢ່າງໃດ).
7ແລ້ວກໍມີກ້ອນເມກລອຍມາ ແລະ ເປັນເງົາປົກຫຸ້ມພວກເພິ່ນໄວ້. ແລ້ວມີສຽງຫນຶ່ງດັງອອກມາຈາກກ້ອນເມກນັ້ນວ່າ, “ທ່ານຜູ້ນີ້ແຫລະ,
ເປັນບຸດທີ່ຮັກຂອງເຮົາ ພວກເຈົ້າຈົ່ງເຊື່ອຟັງເພິ່ນ.” 8ໃນທັນໃດນັ້ນ, ພວກສາວົກຫລຽວເບິ່ງຮອບໆຕົວ, ກໍບໍ່ເຫັນຜູ້ໃດນອກຈາກ
ພຣະເຢຊູເຈົ້າເທົ່ານັ້ນທີ່ຢູ່ກັບພວກເພິ່ນ.
9ຂະນະທີ່ລົງມາແຕ່ພູນັ້ນ, ພຣະອົງເຈົ້າກໍສັ່ງຫ້າມພວກເພິ່ນວ່າ, “ຢ່າບອກສິ່ງທີ່ ພວກເຈົ້າໄດ້ເຫັນນີ້ແກ່ຜູ້ໃດ, ຈົນກວ່າບຸດມະນຸດ
ໄດ້ເປັນຄືນມາຈາກຄວາມຕາຍ.” 10ດັ່ງນັ້ນພວກສາວົກຈຶ່ງບໍ່ບອກໃຜ, ແຕ່ກໍປຶກສາຫາລືກັນໃນພວກເຂົາເອງວ່າ, “ການເປັນຄືນມາຈາກຕາຍນັ້ນ
ຫມາຍຄວາມແນວໃດ”
11ພວກເພິ່ນຈຶ່ງຖາມພຣະເຢຊູເຈົ້າວ່າ, “ດ້ວຍເຫດໃດ ພວກທັມະຈານຈຶ່ງເວົ້າວ່າເອລີຢາຈະຕ້ອງມາກ່ອນ?” 12ພຣະອົງຕອບພວກເພິ່ນວ່າ,
“ຈິງຢູ່ເອລີຢາຕ້ອງມາກ່ອນເພື່ອຈັດແຈງທຸກສິ່ງຄືນສູ່ສະພາບເດີມ. ແລ້ວເປັນດ້ວຍເຫດໃດ ພຣະທັມພຣະເຈົ້າ ໄດ້ຂຽນໄວ້ວ່າບຸດມະນຸດ
ຈະຖືກທົນທຸກທໍຣະມານຢ່າງຫນັກຫນ່ວງຫລາຍ ປະການ ແລະ ເພິ່ນຈະຖືກປະຖິ້ມ ແລະ ຖືກຫມິ່ນປະຫມາດ?
13ແຕ່ເຮົາບອກພວກເຈົ້າວ່າເອລີຢາໄດ້ມາແລ້ວ, ແລະ ຄົນທັງຫລາຍໄດ້ເຮັດກັບເພິ່ນຕາມໃຈມັກ, ດັ່ງທີ່ມີຄຳຂຽນໄວ້ເຖິງເພິ່ນໃນພຣະຄັມພີ.”
14ເມື່ອພວກເຂົາກັບມາພົບສາວົກແລ້ວ, ພວກເຂົາກໍໄດ້ເຫັນຄົນຫມູ່ໃຫຍ່ ຢູ່ອ້ອມພວກເຂົາ ແລະ ມີພວກທັມະຈານກຳລັງໂຕ້ຖຽງກັບພວກເຂົາຢູ່.
15ເມື່ອປະຊາຊົນເຫັນພຣະເຢຊູເຈົ້າ, ພວກເຂົາກໍປະຫລາດໃຈຢ່າງບໍ່ຄາດຄິດມາກ່ອນ ແລະ ພາກັນຟ້າວແລ່ນໄປຄຳນັບພຣະອົງ.
16ພຣະອົງເຈົ້າຖາມພວກສາວົກ ຂອງພຣະອົງວ່າ, “ພວກເຈົ້າກຳລັງໂຕ້ຖຽງ ກັນເຖິງເລື່ອງຫຍັງ?”
17ບາງຄົນໃນຫມູ່ປະຊາຊົນນັ້ນໄດ້ຕອບວ່າ, “ອາຈານເອີຍ, ຂ້ານ້ອຍໄດ້ນຳລູກຊາຍຂອງຂ້ານ້ອຍມາຫາທ່ານ.
ເພາະຜີປາກກືກສິງລາວຈົນລາວປາກບໍ່ໄດ້. 18ເມື່ອມັນເຂົ້າສິງລາວເທື່ອໃດ ແລະ ມັນກໍເຮັດໃຫ້ລາວລົ້ມຊັກດິ້ນເທື່ອນັ້ນ ແລະ
ມີນ້ຳລາຍຟູມປາກທັງຂົບແຂ້ວ ແລະ ຕົວແຂງໄປຫມົດທັງຮ່າງກາຍ. ຂ້ານ້ອຍຂໍໃຫ້ ພວກສາວົກຂອງພຣະອົງຂັບໄລ່ຜີຮ້າຍນັ້ນອອກ,
ແຕ່ພວກເພິ່ນເຮັດບໍ່ໄດ້.” 19ພຣະເຢຊູເຈົ້າ ກ່າວແກ່ພວກເຂົາວ່າ, “ໂອພວກຄົນ ທີ່ຂາດຄວາມເຊື່ອເອີຍ,
ເຮົາຈະຕ້ອງຢູ່ກັບພວກເຈົ້າອີກດົນປານໃດ? ຈົ່ງພາເດັກນ້ອຍມາຫາເຮົາເບິ່ງດູ.”
20ພວກເຂົາກໍໄດ້ພາເດັກຊາຍມາຫາພຣະອົງ. ພໍຜີຮ້າຍທີ່ສິງຢູ່ໃນຕົວເດັກນ້ອຍ ໄດ້ເຫັນພຣະເຢຊູເຈົ້າ, ທັນໃດນັ້ນມັນກໍເຮັດ ໃຫ້ ເດັກນ້ອຍ
ນັ້ນຊັກດິ້ນລົ້ມລົງກັບພື້ນດິນ, ກິ້ງເກືອກ ໄປມານ້ຳລາຍຟູມປາກ. 21ພຣະເຢຊູເຈົ້າ ໄດ້ຖາມພໍ່ຂອງເດັກນ້ອຍວ່າ,
“ລູກຂອງເຈົ້າເປັນແນວນີ້ມາໄດ້ດົນປານໃດແລ້ວ?” ລາວຕອບວ່າ, “ເປັນມາຕັ້ງແຕ່ນ້ອຍພຸ້ນ. 22ຫລາຍເທື່ອແລ້ວ ທີ່ຜີຊົ່ວຮ້າຍພະຍາຍາມຂ້າລູກ
ຂອງຂ້ານ້ອຍ ໂດຍຊຸກລາວໃສ່ໄຟ ແລະ ຊຸກລາວໃຫ້ຕົກນ້ຳ ແລະ ພະຍາຍາມທຳລາຍລາວ.
ແຕ່ຖ້າທ່ານສາມາດຊ່ວຍໄດ້ຂໍໂຜດສົງສານຂ້ານ້ອຍແດ່ທ້ອນ.”
23ພຣະເຢຊູເຈົ້າໄດ້ກ່າວຕອບວ່າ, “ຖ້າເຈົ້າສາມາດຊ່ວຍໄດ້? ທຸກສິ່ງເປັນໄປໄດ້ສຳລັບຜູ້ທີ່ເຊື່ອ.” 24ໃນທັນໃດນັ້ນ ພໍ່ຂອງເດັກນ້ອຍນັ້ນໄດ້ຮ້ອງໄຫ້
ທັງນ້ຳຕາໄຫລກ່າວວ່າ, “ໂຜດຊ່ວຍຂ້ານ້ອຍ!
ໃຫ້ມີຄວາມເຊື່ອຫລາຍກວ່ານີ້ແດ່ທ້ອນ!" 25ເມື່ອພຣະເຢຊູເຈົ້າເຫັນຫມູ່ປະຊາຊົນກຳລັງບຸບຽດກັນເຂົ້າມາໃກ້, ພຣະອົງຈຶ່ງສັ່ງຜີຊົ່ວຮ້າຍນັ້ນວ່າ,
“ບັກຜີປາກກືກຫູຫນວກ, ກູສັ່ງມຶງອອກຈາກເດັກນ້ອຍ ແລະ ຢ່າກັບເຂົ້າມາອີກຈັກເທື່ອ.”
26ຜີຮ້າຍນັ້ນຮ້ອງແຜດສຽງຂຶ້ນ ແລະ ມັນເຮັດໃຫ້ເດັກນ້ອຍຊັກດິ້ນຢ່າງແຮງ ຈົນເຕັມກຳລັງແລ້ວກໍອອກຫນີໄປ.
ເດັກນັ້ນກາຍເປັນເຫມືອນຄົນຕາຍ, ຈົນຫລາຍຄົນເວົ້າອອກມາວ່າ, “ມັນຕາຍແລ້ວ.” 27ແຕ່ພຣະເຢຊູເຈົ້າຈັບມືເດັກນ້ອຍ ແລະ
ດຶງໃຫ້ລຸກຂຶ້ນແລ້ວເດັກນັ້ນກໍລຸກຢືນຂຶ້ນ.
28ເມື່ອພຣະເຢຊູເຈົ້າໄດ້ເຂົ້າໄປໃນເຮືອນແລ້ວ, ພວກສາວົກຂອງພຣະອົງກໍຖາມ ພຣະອົງເປັນທາງສ່ວນຕົວວ່າ, “ເຫດສັນໃດພວກຂ້ານ້ອຍ
ຈຶ່ງຂັບໄລ່ມັນອອກບໍ່ໄດ້?" 29ພຣະເຢຊູເຈົ້າຕອບພວກເພິ່ນວ່າ, “ຜີຮ້າຍແນວນີ້ຈະຂັບໄລ່ອອກດ້ວຍວິທີອື່ນ ບໍ່ໄດ້,
ເວັ້ນໄວ້ແຕ່ດ້ວຍການພາວັນນາອະທິຖານເທົ່ານັ້ນ.”
30ພວກເຂົາໄດ້ອອກຈາກທີ່ນັ້ນ ແລະ ໄດ້ຜ່ານແຂວງຄາລີເລ. ພຣະເຢຊູເຈົ້າບໍ່ຢາກໃຫ້ຜູ້ໃດຮູ້ວ່າພຣະອົງຢູ່ທີ່ໃດ,
31ເພາະພຣະອົງກຳລັງສັ່ງສອນພວກສາວົກຢູ່. ພຣະອົງກ່າວແກ່ພວກເພິ່ນວ່າ, “ບຸດມະນຸດກຳລັງຈະຖືກມອບໄວ້ໃນກຳມືຂອງຄົນທັງຫລາຍ ແລະ
ເຂົາຈະຂ້າເພິ່ນ,
ແຕ່ຫລັງຈາກຖືກຂ້າແລ້ວໄດ້ສາມວັນເພິ່ນຈະຖືກບັນດານໃຫ້ເປັນຄືນມາອີກຄັ້ງ.” 32ແຕ່ພວກສາວົກບໍ່ເຂົ້າໃຈຄວາມຫມາຍຂອງຖ້ອຍຄຳເຫລົ່ານີ້,
ແລະ ພວກເພິ່ນກໍບໍ່ກ້າຈະຖາມພຣະອົງ.
33ແລະ ເມື່ອພວກເຂົາໄດ້ມາຮອດເມືອງກາເປນາອູມ. ເມື່ອເຂົ້າໄປໃນເຮືອນແລ້ວພຣະອົງກໍຖາມພວກສາວົກຂອງພຣະອົງວ່າ,
“ເມື່ອມາຕາມທາງນັ້ນ, ພວກເຈົ້າ ໄດ້ຖົກຖຽງ ກັນເຖິງເລື່ອງຫຍັງ?” 34ພວກເພິ່ນມິດຢູ່, ເພາະເມື່ອມາຕາມທາງນັ້ນພວກເພິ່ນໄດ້ຖົກຖຽງກັນວ່າ
ຜູ້ໃດຈະເປັນໃຫຍ່ທີ່ສຸດ ໃນທ່າມກາງພວກເພິ່ນ. 35ສະນັ້ນ ພຣະອົງຈຶ່ງນັ່ງລົງ, ພຣະອົງເອີ້ນພວກສາວົກສິບສອງຄົນມາ
ພຣະອົງກ່າວແກ່ພວກເພິ່ນວ່າ, “ຖ້າຜູ້ໃດທີ່ຢາກເປັນຜູ້ຕົ້ນ, ກໍໃຫ້ຜູ້ນັ້ນເປັນຜູ້ປາຍ ແລະ ເປັນຜູ້ຮັບໃຊ້ຄົນທັງຫມົດ.”

[36]ພຣະອົງກໍເອົາເດັກນ້ອຍຜູ້ຫນຶ່ງ ແລະ ມາຢືນຢູ່ຕໍ່ຫນ້າພວກເພິ່ນ. ພຣະອົງກໍອຸ້ມເອົາເດັກນ້ອຍນັ້ນ ແລະ ກ່າວແກ່ພວກສາວົກວ່າ,
[37]"ຖ້າຜູ້ໃດກໍຕາມທີ່ຕ້ອນຮັບເດັກນ້ອຍຄົນຫນຶ່ງ ຢ່າງນີ້ໄວ້ໃນນາມຂອງເຮົາ ຜູ້ນັ້ນກໍຕ້ອນຮັບເຮົາ, ຜູ້ໃດທີ່ຕ້ອນຮັບເຮົາ,
ຜູ້ນັ້ນກໍບໍ່ໄດ້ຕ້ອນຮັບເຮົາເທົ່ານັ້ນ, ແຕ່ຍັງຕ້ອນຮັບພຣະອົງຜູ້ທີ່ໄດ້ໃຊ້ເຮົາ ມາເຫມືອນກັນ."
[38]ໂຢຮັນໄດ້ເວົ້າກັບພຣະອົງວ່າ, "ອາຈານເອີຍ, ພວກຂ້ານ້ອຍໄດ້ເຫັນຊາຍຄົນຫນຶ່ງຂັບໄລ່ຜີມານຮ້າຍອອກໄດ້ໃນນາມຂອງທ່ານ ແລະ
ພວກຂ້ານ້ອຍບອກໃຫ້ເຊົາ ເພາະເຂົາບໍ່ເປັນຝ່າຍຂອງພວກເຮົາ."[39]ແຕ່ພຣະເຢຊູເຈົ້າ ໄດ້ຕອບວ່າ, "ຢ່າຫ້າມເຂົາເທາະ ເພາະວ່າບໍ່ມີຜູ້ໃດ
ທີ່ກະທຳການອັດສະຈັນໃນນາມຂອງເຮົາ ແລະ ພາຍຫລັງມາຈະກັບມາເວົ້າ ຫມິ່ນປະຫມາດເຮົາ.
[40]ດ້ວຍວ່າ, ຜູ້ໃດກໍຕາມທີ່ບໍ່ຕໍ່ສູ້ ພວກເຮົາກໍເປັນຝ່າຍຂອງພວກເຮົາ.[41]ເຮົາບອກເຈົ້າຄວາມຈິງວ່າ, ຜູ້ໃດທີ່ເອົານ້ຳຈອກຫນຶ່ງໃຫ້
ພວກເຈົ້າດື່ມເພາະເຈົ້າເປັນຝ່າຍພຣະຄຣິດ, ຜູ້ນັ້ ກໍຈະບໍ່ຂາດບຳເຫນັດຂອງຕົນ.
[42]"ຜູ້ໃດກໍຕາມທີ່ເຮັດໃຫ້ຜູ້ເລັກນ້ອຍທີ່ເຊື່ອ ຜູ້ທີ່ເຊື່ອໃນເຮົາຕົກໃນບາບ, ກໍໃຫ້ເອົາຫີນໂມ້ແປ້ງກ້ອນໃຫຍ່ຜູກຄໍຜູ້ນັ້ນ ແລະ
ຖິ້ມເຂົາລົງໃນທະເລເລິກເສັຽກໍດີກວ່າ.[43]ຖ້າມືຂອງເຈົ້າເຮັດໃຫ້ສະດຸດ, ກໍໃຫ້ຕັດມືນັ້ນອອກເສັຽ.
ທີ່ຈະເຂົ້າສູ່ຊີວິດດ້ວຍມືເບື້ອງດຽວກໍດີກວ່າມີສອງມືແຕ່ເຂົ້າສູ່ນະຮົກໃນໄຟທີ່ບໍ່ມີວັນມອດຈັກເທື່ອ.[44]ໂຕຫນອນບໍ່ຮູ້ຕາຍ ໄຟບໍ່ຮູ້ມອດ.
[45]ຖ້າຕີນຂອງເຈົ້າ ເຮັດໃຫ້ເຮັດບາບ, ກໍໃຫ້ຕັດອອກຖິ້ມເສັຽ, ທີ່ຈະເຂົ້າສູ່ຊີວິດດ້ວຍຕີນເບື້ອງດຽວ ກໍດີກວ່າມີຕີນສອງຂ້າງແຕ່ຕ້ອງ
ຖືກໂຍນຖິ້ມລົງໃນໄຟນະຮົກ.[46]ຢູ່ບ່ອນນັ້ນໂຕຫນອນບໍ່ຮູ້ຕາຍ ແລະໄຟບໍ່ຮູ້ມອດຈັກເທື່ອ.
[47]ຖ້າຕາຂອງເຈົ້າພາໃຫ້ເຮັດບາບ, ຈົ່ງຄວັກອອກຖິ້ມເສັຽ, ທີ່ຈະເຂົ້າໃນຣາຊະອານາຈັກຂອງພຣະເຈົ້າດ້ວຍຕາຂ້າງດຽວ ກໍດີກວ່າມີຕາສອງຂ້າງ
ແຕ່ຕ້ອງຖືກຖິ້ມລົງໃນໄຟ ນະຮົກ.[48]ທີ່ຊຶ່ງຫນອນບໍ່ຮູ້ຕາຍ ແລະ ໄຟບໍ່ຮູ້ມອດຈັກເທື່ອ.'
[49]ເພາະວ່າ ທຸກຄົນຈະຕ້ອງຖືກເອືອບດ້ວຍເກືອແລ້ວຊຳຮະດ້ວຍໄຟ.[50]ເກືອເປັນສິ່ງທີ່ດີ, ແຕ່ຖ້າເກືອຫມົດຣົດເຄັມແລ້ວ
ຈະກັບເຮັດໃຫ້ເຄັມອີກໄດ້ຢ່າງໃດ? ເຈົ້າທັງຫລາຍ ຈົ່ງຮັກສາເກືອໄວ້ໃນຕົວຂອງພວກເຈົ້າ ແລະ ຢູ່ດ້ວຍກັນຢ່າງສະຫງົບສຸກເຖີ້ນ."

 generated on Tue Jun 17 19:01:42 2025

# 10

1ແລ້ວພຣະເຢຊູເຈົ້າອອກຈາກທີ່ນັ້ນໄປແຂວງຢູດາຍ ແລ້ວກໍຂ້າມໄປອີກຟາກຫນຶ່ງຂອງແມ່ນ້ຳຈໍແດນ, ແລະປະຊາຊົນຫມູ່ໃຫຍ່
ເຂົ້າມາຫາພຣະອົງອີກ. ພຣະອົງຊົງສອນພວກເຂົາ, ດັ່ງທີ່ພຣະອົງເຄີຍເຮັດມາ.2ພວກຟາຣີຊາຍກໍເຂົ້າມາຖາມເພື່ອທົດລອງ ພຣະອົງຖາມເຂົາວ່າ
“ຕາມກົດບັນຍັດຜູ້ຊາຍຢ່າຮ້າງເມັຽຂອງຕົນໄດ້ບໍ?”3ພຣະອົງກໍຕອບພວກເຂົາວ່າ,“ແລ້ວໂມເຊ ໄດ້ໃຫ້ຂໍ້ຄຳສັ່ງໄວ້ຢ່າງໃດ?”4ພວກເຂົາຕອບວ່າ,
“ໂມເຊອະນຸຍາດໃຫ້ເຮັດຫນັງສືຢ່າຮ້າງ ແລະ ປ່ອຍເມັຽໄປໄດ້.”

5"ມັນເປັນເພາະໃຈຂອງພວກທ່ານແຂງກະດ້າງ ເຮັດໃຫ້ໂມເຊຕ້ອງຂຽນບັນຍັດນີ້," ພຣະເຢຊູເຈົ້າບອກພວກເຂົາວ່າ,
6ຕັ້ງແຕ່ຕົ້ນເລີ່ມວາງຮາກສ້າງໂລກ' ພຣະເຈົ້າໄດ້ຊົງສ້າງມະນຸດໃຫ້ເປັນຊາຍ ແລະຍິງ.'
7ເພາະເຫດນີ້ຜູ້ຊາຍຈຶ່ງຈາກພໍ່ແມ່ ຂອງຕົນແລະໄປຕິດພັນຢູ່ກັບເມັຽຂອງຕົນ,
8ແລ້ວເຂົາທັງສອງກໍຈະເປັນກາຍເປັນເນື້ອດຽວກັນ.’ພວກເຂົາຈຶ່ງບໍ່ເປັນສອງອີກຕໍ່ໄປ, ແຕ່ເປັນເຫມືອນກາຍດຽວກັນ.
9ເຫດສະນັ້ນເມື່ອພຣະເຈົ້າໄດ້ໃຫ້ເຂົາຮ່ວມກັນຢູ່ແລ້ວ, ກໍຢ່າໃຫ້ມະນຸດ ເຮັດໃຫ້ແຍກຈາກກັນເລີຍ.”
10ເມື່ອພວກເຂົາຢູ່ໃນເຮືອນແລ້ວ, ພວກສາວົກກໍມາຖາມ ພຣະເຢຊູເຈົ້າເລື່ອງການຢ່າຮ້າງນີ້ອີກ.11ພຣະອົງຕອບພວກເພິ່ນວ່າ,
“ໃຜກໍຕາມທີ່ຢ່າຮ້າງເມັຽຂອງຕົນແລ້ວໄປ ແຕ່ງງານກັບຍິງອື່ນຊາຍຜູ້ນັ້ນ ກໍເຮັດຜິດໃນຖານຫລິ້ນຊູ້.
12ແລະຖ້າຍິງໃດທີ່ຢ່າຮ້າງຜົວຂອງຕົນແລະໄປແຕ່ງງານກັບຊາຍອື່ນຍິງນັ້ນກໍເຮັດຜິດໃນຖານຫລິ້ນຊູ້.”
13ແລ້ວພວກເຂົາ ໄດ້ພາເດັກນ້ອຍມາຫາ ພຣະອົງເພື່ອໃຫ້ພຣະອົງໄດ້ວາງມືໃສ່ ພວກເຂົາ, ແຕ່ພວກສາວົກໄດ້ຫ້າມພວກເຂົາໄວ້.
14ແລ້ວພຣະເຢຊູເຈົ້າຊົງສັງເກດເຫັນດັ່ງນັ້ນ, ພຣະອົງກໍບໍ່ພໍໃຈ ແລະຊົງບອກພວກເຂົາວ່າ, “ຈົ່ງປ່ອຍເດັກນ້ອຍໃຫ້ເຂົ້າມາຫາເຮົາ, ແລະ
ຢ່າຫ້າມພວກເຂົາເລີຍ ເພາະວ່າອານາຈັກຂອງພຣະເຈົ້າກໍເປັນຂອງຜູ້ທີ່ເປັນດັ່ງເດັກນ້ອຍເຫລົ່ານີ້ແຫລະ.
15ເຮົາບອກພວກເຈົ້າຕາມຄວາມຈິງວ່າ, ຖ້າຜູ້ໃດບໍ່ຮັບຣາຊະອານາຈັກຂອງພຣະເຈົ້າ
ເຫມືອນເດັກນ້ອຍຈະບໍ່ໄດ້ເຂົ້າໄປໃນຣາຊະອານາຈັກນັ້ນ."16ແລ້ວພຣະອົງກໍໄດ້ອູ້ມເດັກນ້ອຍນັ້ນ ພຣະອົງວາງມືໃສ່ ແລະ
ອວຍພອນໃຫ້ພວກເຂົາ.
17ເມື່ອ ພຣະອົງຊົງເລີ່ມອອກເດີນທາງກໍມີຊາຍຄົນຫນຶ່ງແລ່ນມາຄຸເຂົ່າລົງ ຕໍ່ຫນ້າ ພຣະອົງແລະຖາມວ່າ,“ພຣະອາຈານ ຜູ້ປະເສີດເອີຍ,
ຂ້ານ້ອຍຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ຮັບຊີວິດນິຣັນດອນ?”18ພຣະເຢຊູເຈົ້າ ຕອບລາວວ່າ,“ດ້ວຍເຫດໃດເຈົ້າຈຶ່ງເອີ້ນເຮົາ ວ່າຜູ້ປະເສີດ?
ບໍ່ມີຜູ້ໃດປະເສີດດອກ ນອກຈາກພຣະເຈົ້າອົງດຽວເທົ່ານັ້ນ.19ເຈົ້າຮູ້ຈັກພຣະບັນຍັດທີ່ບອກວ່າ, ‘ຢ່າຂ້າຄົນ, ຢ່າຫລິ້ນຊູ້ສູ່ຜົວເມັຽຜູ້ອື່ນ,
ຢ່າລັກຊັບ, ຢ່າເປັນພະຍານບໍ່ຈິງ, ຢ່າຫລອກລວງ, ຈົ່ງໃຫ້ກຽດແກ່ພໍ່ແມ່ຂອງຕົນ.
20ຊາຍຄົນນັ້ນຕອບວ່າ, “ທ່ານອາຈານເອີຍ, ຂ້ານ້ອຍໄດ້ຖືຮັກສາ
ແລະເຊື່ອຟັງເຮັດຕາມກົດເຫລົ່ານັ້ນຕັ້ງແຕ່ເປັນເດັກນ້ອຍພຸ້ນ.”21ພຣະເຢຊູເຈົ້າໄດ້ເພັ່ງຕາເບິ່ງເຂົາດ້ວຍຄວາມຮັກ, ພຣະອົງເວົ້າກັບເຂົາວ່າ
“ເຈົ້າຍັງຂາດຢູ່ສິ່ງຫນຶ່ງ. ຈົ່ງໄປຂາຍທຸກສິ່ງທີ່ເຈົ້າມີຢູ່ ແລະ ບໍຣິຈາກເງິນນັ້ນໃຫ້ແກ່ຄົນຍາກຈົນ ແລະເຈົ້າຈະມີຊັບສົມບັດໃນສະຫວັນ,
ແລ້ວຈົ່ງຕາມເຮົາມາ.22ແຕ່ຊາຍຄົນນັ້ນທໍ້ໃຈຫລາຍເພາະຄຳເວົ້ານັ້ນລາວເດີນອອກໄປດ້ວຍຄວາມໂສກເສົ້າ ແລະ
ເປັນທຸກໃຈເພາະລາວເປັນຄົນຮັ່ງມີຫລາຍ.
23ພຣະເຢຊູເຈົ້າ ແນມເບິ່ງອ້ອມຮອບ
ແລ້ວກ່າວແກ່ພວກສາວົກຂອງພຣະອົງວ່າ,“ຄົນຮັ່ງມີຈະເຂົ້າໃນຣາຊະອານາຈັກຂອງພຣະເຈົ້າກໍເປັນເລື່ອງຍາກ”24ແລ້ວພວກສາວົກກໍປະຫລາດໃຈໃນຄຳເວົ້າຂອງ
ພຣະເຢຊູເຈົ້າໄດ້ກ່າວແກ່ພວກເພິ່ນອີກວ່າ,
“ລູກເອີຍ,"ການທີ່ຄົນຮັ່ງມີຈະເຂົ້າໄປໃນຣາຊະອານາຈັກຂອງພຣະເຈົ້າກໍຍາກແທ້ໆ25ເພາະອູດຈະລອດຮູເຂັມ,
ກໍງ່າຍກວ່າຄົນຮັ່ງມີຜູ້ທີ່ຈະເຂົ້າໄປໃນຣາຊະອານາຈັກຂອງພຣະເຈົ້າ.”
26ພວກເຂົາປະຫລາດໃຈຫລາຍແລະເວົ້າກັນວ່າ,“ແລ້ວຜູ້ໃດຈະລອດພົ້ນໄດ້?”27ພຣະເຢຊູເຈົ້າແນມເບິ່ງພວກເຂົາ ແລະກ່າວວ່າ,
“ເປັນໄປບໍ່ໄດ້ສຳລັບມະນຸດ ແຕ່ບໍ່ແມ່ນກັບພຣະເຈົ້າ. ເພາະຝ່າຍພຣະເຈົ້າຊົງເຮັດໄດ້ທຸກສິ່ງ.”28ເປໂຕກໍເລີ່ມທູນພຣະອົງວ່າ “ເບິ່ງດູ
ພວກຂ້ານ້ອຍໄດ້ສະຫລະທຸກສິ່ງ ແລະ ໄດ້ຕິດຕາມພຣະອົງມາ.”
29ພຣະເຢຊູເຈົ້າກ່າວວ່າ, “ເຮົາບອກເຈົ້າຕາມຄວາມຈິງວ່າ, ຜູ້ໃດທີ່ຍອມລະບ້ານເຮືອນ, ຫລືອ້າຍເອື້ອຍນ້ອງ, ຫລືພໍ່ແມ່, ຫລືລູກໆ,
ຫລືທີ່ດິນເພາະເຫັນແກ່ເຮົາແລະ ເຫັນແກ່ຂ່າວປະເສີດຂອງເຮົາ.30ເປັນພີ່ນ້ອງຊາຍຍິງ ແລະພໍ່ແມ່, ແລະລູກໆ, ແລະ ທີ່ດິນຮ້ອຍເທົ່າໃນຍຸກນີ້,
ພ້ອມກັບການຖືກຂົ່ມເຫັງ ແລະ ໃນໂລກຫນ້າກໍຈະໄດ້ຮັບຊີວິດນິຣັນດອນ.31ແຕ່ຫລາຍຄົນທີ່ເປັນຜູ້ຕົ້ນຈະກັບເປັນຜູ້ປາຍ ແລະ
ຜູ້ທີ່ເປັນປາຍໃນເວລານີ້ກໍຈະເປັນຜູ້ຕົ້ນ.”
32ພວກເຂົາກຳລັງເດີນທາງ, ໄປກຸງເຢຣູຊາເລັມ, ແລະພຣະເຢຊູເຈົ້າຍ່າງລ່ວງຫນ້າໄປກ່ອນພວກເຂົາ.
ພວກສາວົກຕ່າງກໍວຸ້ນວາຍໃຈແລະພວກອື່ນທີ່ຍ່າງມາຕາມຫລັງກໍມີ ຄວາມຢ້ານ.
ແລ້ວພຣະເຢຊູເຈົ້າກໍພາສາວົກສິບສອງຄົນຍ່າງຫລີກອອກໄປທາງຂ້າງອີກເທື່ອຫນຶ່ງແລະກ່າວເຖິງເຫດການທີ່ຈຳຕ້ອງເກີດຂຶ້ນກັບພຣະອົງ.
33“ເບິ່ງແມ! ພວກເຮົາກຳລັງຈະໄປຍັງກຸງເຢຣູຊາເລັມ, ແລ້ວບຸດມະນຸດຈະຖືກມອບໄວ້ກັບພວກຫົວຫນ້າປະໂລຫິດແລະພວກທັມະຈານ.
ພວກເຫລົ່ານີ້ຈະ ຕັດສິນລົງໂທດພຣະອົງໃຫ້ເຖິງຕາຍແລະຈະມອບພຣະອົງໄວ້ກັບຄົນຕ່າງຊາດ.
34ພວກເຂົາຈະເຢາະເຢີ້ຍພຣະອົງຈະຖົ່ມນ້ຳລາຍໃສ່ພຣະອົງ, ແລະຂ້ຽນຕີພຣະອົງແລະຈະຂ້າພຣະອົງເສັຽ.
ແຕ່ໃນວັນຖ້ວນສາມພຣະອົງກໍຈະເປັນຄືນມາຈາກຄວາມຕາຍ.”
35ຢາໂກໂບແລະໂຢຮັນລູກຊາຍຂອງເຊເບດາຍ, ໄດ້ເຂົ້າມາຫາພຣະອົງແລະເວົ້າວ່າ, “ທ່ານອາຈານເອີຍ,
ຂໍພຣະອົງຊ່ວຍເຮັດຕາມທີ່ເຮົາຕ້ອງການໄດ້ບໍ?36ພຣະອົງຊົງຕອບວ່າ,
“ຈະໃຫ້ເຮົາເຮັດຫຍັງເພື່ອພວກເຈົ້າ?”37ພວກເຂົາຕອບວ່າ,“ເມື່ອທ່ານຢູ່ໃນສະຫງ່າຣາສີ, ແລ້ວ ຂໍໃຫ້ພວກຂ້ານ້ອຍ
ທັງສອງນັ່ງທີ່ເບື້ອງຂວາຂອງທ່ານ ຄົນຫນຶ່ງ ແລະ ທີ່ເບື້ອງຊ້າຍຄົນຫນຶ່ງ.”


generated on Tue Jun 17 19:01:42 2025

[38]ແລ້ວພຣະເຢຊູເຈົ້າຊົງກ່າວແກ່ພວກເຂົາວ່າ,“ທີ່ພວກເຈົ້າ ຂໍຮ້ອງ ນັ້ນ ພວກເຈົ້າບໍ່ຮູ້ຈັກ. ທ່ານສາມາດ ດື່ມຈອກ ທີ່ເຮົາຈະດື່ມນັ້ນ
ພວກເຈົ້າຈະດື່ມໄດ້ບໍ່? ແລະ ບັບຕິສະມາ ທີ່ເຮົາ ຮັບນັ້ນ ພວກເຈົ້າ ຈະຮັບໄດ້ ບໍ?”[39]ພວກເພິ່ນ ຕອບວ່າ, “ໄດ້ຢູ່ຂ້ານ້ອຍ.” ພຣະເຢຊູເຈົ້າ
ກ່າວແກ່ ພວກເພິ່ນວ່າ, “ພວກເຈົ້າ ຈະດື່ມຈາກຈອກ ທີ່ ເຮົາ ຕ້ອງດື່ມແທ້ ແລະ ບັບຕິສະມາ ທີ່ເຮົາຮັບ, ພວກເຈົ້າ ກໍຕ້ອງຮັບ ແທ້.[40]ແຕ່
ຈະເລືອກ ວ່າຜູ້ໃດ ຈະນັ່ງທີ່ເບື້ອງ ຂວາ ຫລື ທີ່ ເບື້ອງຊ້າຍຂອງເຮົານັ້ນ ບໍ່ແມ່ນໜ້າທີ່ ເຮົາ ຈະຈັດໃຫ້, ແຕ່ ພຣະເຈົ້າ ໄດ້ຈັດໄວ້ ສຳລັບຜູ້ໃດ
ກໍເປັນຂອງຜູ້ນັ້ນ.”
[41]ເມື່ອສາວົກຄົນອື່ນໆ ອີກສິບຄົນ ໄດ້ຍິນເຖິງເລື່ອງນີ້ແລ້ວ, ພວກເຂົາກໍເຄືອງໃຈຫລາຍໃຫ້ຢາໂກໂບ ແລະ ໂຢຮັນ.
[42]ພຣະເຢຊູເຈົ້າໄດ້ເອີ້ນພວກເພິ່ນມາເຕົ້າໂຮມກັນແລ້ວ ກ່າວວ່າ, “ພວກເຈົ້າຕ່າງກໍຮູ້ວ່າຜູ້ທີ່ມະນຸດຖືວ່າ ເປັນຜູ້ປົກຄອງ
ປະຊາຊົນກໍມີອຳນາດເຫນືອປະຊາຊົນ ທີ່ເຂົາປົກຄອງ ແລະ ຜູ້ມີຕຳແຫນ່ງໃຫຍ່ກໍໃຊ້ສິດອຳນາດເຫນືອພວກເຂົາ.
[43]ແຕ່ໃນທ່າມກາງພວກເຈົ້າແລ້ວບໍ່ເປັນດັ່ງນັ້ນເລີຍ, ຖ້າຜູ້ໃດກໍຕາມໃນພວກເຈົ້າຢາກເປັນໃຫຍ່ ເຂົາຕ້ອງເປັນຜູ້ຮັບໃຊ້ເຈົ້າທັງຫລາຍ;[44]ແລະ
ຖ້າຜູ້ໃດໃນພວກເຈົ້າຢາກເປັນເອກເຂົາກໍຕ້ອງເປັນຂ້ອຍໃຊ້ຂອງທຸກຄົນ.[45]ເພາະບຸດມະນຸດ ບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້,
ຕົນແຕ່ມາເພື່ອຮັບໃຊ້ຄົນອື່ນ, ແລະ ປຣະທານຊີວິດຂອງພຣະອົງເປັນຄ່າໄຖ່ຄົນຈຳນວນລວງຫລາຍ.”
[46]ພວກເພິ່ນໄດ້ເດີນທາງມາເຖິງເມືອງເຢຣິໂກ. ເມື່ອພຣະອົງກຳລັງອອກຈາກເມືອງເຢຣິໂກໄປກັບພວກສາວົກ ແລະ ປະຊາຊົນໝູ່ໃຫຍ່,
ມີຂໍທານຕາບອດຜູ້ຫນຶ່ງຊື່ວ່າບາຣະຕີມາຍ, ເປັນລູກຊາຍຂອງຕີມາຍ, ນັ່ງຂໍທານທີ່ແຄມທາງ.[47]ເມື່ອລາວໄດ້ຍິນວ່າພຣະເຢຊູເຈົ້າ ໄທນາຊາເຣັດ,
ກຳລັງມາໃກ້ລາວກໍຮ້ອງຂຶ້ນວ່າ, “ເຢຊູ, ບຸດດາວິດເອີຍ, ຂໍຊົງເມດຕາສົງສານຂ້ານ້ອຍແດ່ທ້ອນ!”[48]ມີຫລາຍຄົນໄດ້ຫ້າມຄົນຕາບອດ,
ບອກເຂົາໃຫ້ມິດ. ແຕ່ລາວແຮງຮ້ອງດັງຂຶ້ນຕື່ມວ່າ, “ເຢຊູ, ບຸດດາວິດເອີຍ, ຂໍໂຜດເມດຕາສົງສານຂ້ານ້ອຍແດ່ຖ້ອນ!”
[49]ພຣະເຢຊູເຈົ້າຈຶ່ງຢຸດ ແລະ ສັ່ງວ່າໄປເອີ້ນເອົາລາວມາ. ພວກເຂົາຈຶ່ງໄປເອີ້ນເອົາຊາຍຕາບອດນັ້ນ, ເວົ້າວ່າ, “ຈົ່ງກ້າຫານ ແລະ ລຸກຂຶ້ນ!
ພຣະອົງກຳລັງເອີ້ນເອົາເຈົ້າ.”[50]ຊາຍຕາບອດຖິ້ມຜ້າຕູ້ມຂອງຕົນ, ຮີບລຸກ, ແລະ ຂຶ້ນມາຫາພຣະເຢຊູເຈົ້າ.
[51]ພຣະເຢຊູເຈົ້າໄດ້ຖາມລາວວ່າ, “ເຈົ້າຢາກໃຫ້ເຮົາເຮັດຫຍັງແກ່ເຈົ້າ?” ຊາຍຕາບອດຕອບວ່າ, “ພຣະອາຈານເອີຍ,
ຂໍໂຜດໃຫ້ຂ້ານ້ອຍໄດ້ເຫັນຮຸ່ງແດ່ຖ້ອນ.”[52]ແລ້ວພຣະເຢຊູເຈົ້າໄດ້ຕອບວ່າ, “ໄປສາ. ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ.”
ໃນທັນໃດນັ້ນລາວກໍເຫັນຮຸ່ງອີກຄັ້ງ, ແລະ ເຂົາກໍເດີນຕິດຕາມພຣະເຢຊູເຈົ້າ ໄປ.


generated on Tue Jun 17 19:01:42 2025

11 [1]ເມື່ອພວກເຂົາໄດ້ມາໃກ້ຮອດນະຄອນເຢຣູຊາເລັມແລ້ວ, ພວກເຂົາຢູ່ໃກ້ບ້ານເບັດຟາເຄ ແລະ ບ້ານເບັດທານີ, ທີ່ພູເຂົາຫມາກກອກເທດ,
ແລະ ພຣະເຢຊູເຈົ້າໄດ້ສົ່ງສາວົກສອງຄົນລ່ວງຫນ້າໄປກ່ອນ[2]ແລະ ໄດ້ສັ່ງພວກເພິ່ນວ່າ,
“ຈົ່ງເຂົ້າໄປໃນບ້ານທີ່ຢູ່ຕໍ່ກົງກັນຂ້ວາມກັບພວກເຈົ້ານັ້ນ. ເມື່ອເຈົ້າໄປຮອດທີ່ນັ້ນແລ້ວ, ພວກເຈົ້າຈະພົບລໍນ້ອຍໂຕຫນຶ່ງ, ທີ່ບໍ່ມີຜູ້ໃດເຄີຍຂີ່ຈັກເທື່ອ.
ຈົ່ງແກ້ເຊືອກມັນອອກ ແລະ ຈູງມັນມາທີ່ນີ້.[3]ຖ້າມີຜູ້ໃດຖາມວ່າ, ‘ເປັນຫຍັງຈຶ່ງເຮັດແນວນີ້?’ ເຈົ້າຄວນກ່າວວ່າ, ‘ອົງພຣະຜູ້ເປັນເຈົ້າຕ້ອງການມັນ
ແລະ ທັນໃດນັ້ນຈະສົ່ງມັນຄືນມາໃຫ້ທີ່ນີ້.’”

[4]ແລ້ວພວກເພິ່ນຈຶ່ງຈາກໄປ ແລະ ກໍໄດ້ພົບລໍນ້ອຍໂຕຫນຶ່ງທີ່ເຂົາຜູກໄວ້ຢູ່ໃກ້ປະຕູເຮືອນແຄມທາງ, ແລະ ພວກເພິ່ນກໍແກ້ເຊືອກມັດລໍອອກ,
[5]ບາງຄົນທີ່ຢືນຢູ່ ໃນທີ່ນັ້ນກໍຖາມວ່າ, “ພວກເຈົ້າເຮັດຫຍັງຢູ່,
ແກ້ເອົາລໍນ້ອຍໄປເຮັດຫຍັງ?”[6]ພວກເພິ່ນຈຶ່ງຕອບຕາມທີ່ພຣະເຢຊູເຈົ້າໄດ້ບອກແລ້ວ, ແລະ ຄົນເຫລົ່ານັ້ນກໍຍອມໃຫ້ພວກເພິ່ນເອົາໄປ.
[7]ສາວົກສອງຄົນໄດ້ຈູງລໍນ້ອຍນັ້ນມາຫາພຣະເຢຊູເຈົ້າ ແລະ ພວກເພິ່ນກໍເອົາເຄື່ອງນຸ່ງຂອງຕົນປູຫລັງຂອງມັນ ແລະ ໃຫ້ພຣະເຢຊູເຈົ້າຂຶ້ນຂີ່.
[8]ມີຫລາຍຄົນ ໄດ້ເອົາເສື້ອຜ້າຂອງຕົນປູລົງຕາມທາງນັ້ນ, ແລະ ຄົນອື່ນກໍໄດ້ຕັດເອົາງ່າໄມ້ຕາມທົ່ງນາ ມາ.[9]ຄົນທີ່ຍ່າງໄປກ່ອນ ແລະ
ບາງຄົນກັບທີ່ຕາມຫລັງພຣະເຢຊູເຈົ້າໄປຕ່າງກໍຮ້ອງຂຶ້ນວ່າ, “ໂຮຊັນນາ! ຂໍພຣະເຈົ້າອວຍພອນທ່ານ
ທີ່ສະເດັດມາໃນນາມຂອງອົງພຣະຜູ້ເປັນເຈົ້າ.[10]ຂໍພຣະເຈົ້າອວຍພອນ ອານາຈັກທີ່ກຳລັງຈະມາເຖິງ
ຄືອານາຈັກຂອງດາວິດບັນພະບຸຣຸດຂອງພວກເຮົາ! ໂຮຊັນນາໃນທີ່ສະຫວັນສູງສຸດ!”
[11]ແລ້ວພຣະເຢຊູເຈົ້າ ໄດ້ເຂົ້າໄປນະຄອນເຢຣູຊາເລັມ ແລະ ເຂົ້າໄປໃນພຣະວິຫານ ແລະ ລຽບເບິ່ງທົ່ວໄປໃນທຸກສິ່ງ. ເມື່ອ, ຄໍ່າຫລາຍແລ້ວ,
ພຣະອົງຈຶ່ງກັບຄືນ ໄປບ້ານເບັດທານີ ກັບສາວົກສິບສອງຄົນ.[12]ໃນວັນຕໍ່ມາ, ເມື່ອພຣະເຢຊູເຈົ້າ ກັບພວກສາວົກ ອອກຈາກບ້ານເບັດທານີໄປ,
ພຣະອົງກໍຫິວເຂົ້າ.
[13]ເມື່ອແນມເບິ່ງແຕ່ໄກ ເຫັນຕົ້ນຫມາກເດື່ອເທດຕົ້ນຫນຶ່ງ ຊຶ່ງມີໃບດົກດີ, ພຣະອົງກໍໄປເບິ່ງວ່າມັນມີຫມາກຫລືບໍ່, ແລະ ເມື່ອພຣະອົງໄປເຖິງແລ້ວ,
ພຣະອົງກໍບໍ່ເຫັນຫມາກມັນເລີຍ, ເຫັນແຕ່ໃບເທົ່ານັ້ນ, ເພາະບໍ່ແມ່ນຣະດູສຳລັບຕົ້ນຫມາກເດື່ອເທດເທື່ອ.[14]ດັ່ງນັ້ນ ພຣະອົງຈຶ່ງກ່າວ
ຕໍ່ຕົ້ນຫມາກເດື່ອເທດວ່າ, “ຢ່າໃຫ້ຜູ້ໃດ ໄດ້ກິນຫມາກຈາກຕົ້ນເຈົ້າອີກຈັກເທື່ອ.” ແລະ ຝ່າຍສາວົກຂອງພຣະອົງກໍໄດ້ຍິນຄຳທີ່
ພຣະອົງໄດ້ກ່າວນັ້ນ.
[15]ພວກເຂົາໄດ້ມາເຖິງນະຄອນເຢຣູຊາເລັມ, ແລະ ພຣະອົງໄດ້ເຂົ້າໄປໃນ ບໍຣິເວນ ພຣະວິຫານ ແລະ ໄດ້ຕັ້ງຕົ້ນຂັບໄລ່ບັນດາພວກຄົນຊື້ ແລະ
ຂາຍໃນພຣະວິຫານ. ພຣະອົງໄດ້ຂວ້ຳໂຕະຂອງພວກຮັບແລກປ່ຽນເງິນ ແລະ ຂວ້ຳບ່ອນນັ່ງຂອງຄົນຂາຍນົກເຂົາ.
[16]ພຣະອົງບໍ່ອະນຸຍາດໃຫ້ຜູ້ໃດຂົນສິ່ງຂອງຜ່ານພຣະວິຫານໄປ.
[17]ພຣະອົງກໍໄດ້ສັ່ງສອນພວກເຂົາ ແລະ ກ່າວວ່າ, “ບໍ່ມີຄຳຂຽນໄວ້, ‘ພຣະວິຫານ ຂອງເຮົາຈະເອີ້ນວ່າເປັນສະຖານທີ່ພາວັນນາອະທິຖານ
ສຳລັບຄົນທຸກຊາດ?’ ແຕ່ ພວກເຈົ້າໄດ້ເຮັດໃຫ້ເປັນຖໍ້າຂອງໂຈນ.”[18]ເມື່ອພວກຫົວຫນ້າປະໂລຫິດ ແລະ ພວກທັມະຈານໄດ້ຍິນ, ແລະ
ພວກເຂົາຈຶ່ງຊອກຫາວິທີທາງຈະຂ້າພຣະເຢຊູເຈົ້າ. ເພາະພວກເຂົາຢ້ານພຣະອົງ ເພາະມີປະຊາຊົນທັງຫມົດໄດ້ປະຫລາດໃຈ
ໃນຄຳສັ່ງສອນຂອງພຣະອົງ.[19]ພໍຕອນຄໍ່າມາ, ພວກເພິ່ນກໍພາກັນອອກໄປຈາກເມືອງ.
[20]ເມື່ອພວກເຂົາໄດ້ຍ່າງໃນຕອນເຊົ້າ, ພວກເຂົາໄດ້ເຫັນຕົ້ນເດື່ອເທດນັ້ນມັນໄດ້ຫ່ຽວແຫ້ງຈົນເຖິງຮາກ.[21]ເປໂຕໄດ້ຈື່ ແລະ ເວົ້າວ່າ,
“ພຣະອາຈານເອີຍ, ເບິ່ງແມ! ຕົ້ນເດື່ອເທດທີ່ທ່ານໄດ້ສາບແຊ່ງນັ້ນຕາຍເສັຽແລ້ວ.”
[22]ພຣະເຢຊູເຈົ້າໄດ້ຕອບພວກເຂົາວ່າ, “ຈົ່ງມີຄວາມເຊື່ອໃນພຣະເຈົ້າ.[23]ເຮົາ ບອກພວກເຈົ້າຕາມຄວາມຈິງວ່າ, ຜູ້ໃດກໍຕາມທີ່ສັ່ງພູຫນ່ວຍນີ້ວ່າ,
‘ຈົ່ງເຄື່ອນຍ້າຍໄປຕົກລົງສູ່ທະເລ’, ແລະ ຖ້າບໍ່ມີຄວາມສົງສັຍໃນໃຈ ແຕ່ເຊື່ອສິ່ງທີ່ເຂົາເວົ້າກັບພຣະເຈົ້າ ວ່າຈະເປັນໄປຕາມຄຳສັ່ງນັ້ນ,
ແລ້ວກໍເປັນໄປຕາມນັ້ນ.
[24]ດ້ວຍເຫດນັ້ນເຮົາບອກເຈົ້າທັງຫລາຍວ່າ: ທຸກສິ່ງທີ່ພວກເຈົ້າພາວັນນາອະທິຖານ ແລະ ຂໍນັ້ນ, ຈົ່ງເຊື່ອວ່າໄດ້ຮັບແລ້ວ, ແລະ
ຈະເປັນແກ່ເຈົ້າທັງຫລາຍ.[25]ເມື່ອເຈົ້າຢືນ ແລະ ພາວັນນາອະທິຖານ, ເຈົ້າຕ້ອງຈົ່ງຍົກໂທດອະພັຍໃຫ້ທຸກຄົນໃນທຸກສິ່ງທີ່ທ່ານໄດ້ຜິດແກ່ຜູ້ອື່ນ,
ເພື່ອພຣະບິດາເຈົ້າຂອງພວກເຈົ້າ ຜູ້ສະຖິດຢູ່ໃນສະຫວັນຈະຍົກຄວາມຜິດບາບ ຂອງພວກເຈົ້າດ້ວຍ."[26]ແຕ່ຖ້າເຈົ້າບໍ່ຍົກໂທດນັ້ນ
ພຣະບິດາຂອງເຈົ້າຜູ້ຊົງສະຖິດໃນສະຫວັນ ກໍຈະບໍ່ຍົກຄວາມຜິດຂອງເຈົ້າເຫມືອນກັນ.
[27]ພວກເຂົາໄດ້ກັບຄືນໄປໃນນະຄອນເຢຣູຊາເລັມອີກຄັ້ງຫນຶ່ງ, ເມື່ອພຣະເຢຊູເຈົ້າ ຍ່າງເຂົ້າໄປໃນພຣະວິຫານ, ພວກຫົວຫນ້າປະໂລຫິດ,
ພວກທັມະຈານ ແລະ ພວກຜູ້ອາວຸໂສກໍ ມາຫາພຣະອົງ.[28]ພວກເຂົາໄດ້ຖາມວ່າ, “ເຈົ້າມີສິດອຳນາດຫຍັງ ຈຶ່ງເຮັດການເຫລົ່ານີ້, ແລະ
ຜູ້ໃດໃຫ້ສິດນີ້ແກ່ເຈົ້າ?”
[29]ພຣະເຢຊູເຈົ້າຊົງຕອບພວກເຂົາວ່າ, “ເຮົາຈະຖາມທ່ານຂໍ້ຫນຶ່ງ. ບອກແກ່ເຮົາ ແລະ ເຮົາຈະບອກພວກເຈົ້າວ່າ,
ເຮົາເຮັດການເຫລົ່ານີ້ດ້ວຍສິດອັນໃດ.[30]ຈົ່ງບອກເຮົາມາເບິ່ງດູວ່າ, ‘ຜູ້ໃດໃຫ້ສິດແກ່ໂຢຮັນ ເພື່ອໃຫ້ຮັບບັບຕິສະມາ ຈາກສະຫວັນ ຫລື
ວ່າຈາກມະນຸດ?’
[31]ພວກເຂົາໄດ້ປຶກສາກັນ ແລະ ກ່າວວ່າ, “ຖ້າພວກເຮົາບອກວ່າ, 'ມາຈາກສະຫວັນ', ພຣະອົງກໍຈະກ່າວວ່າ
‘ເປັນຫຍັງພວກເຈົ້າຈຶ່ງບໍ່ເຊື່ອໂຢຮັນ?’[32]ແຕ່ພວກເຮົາຈະຕອບວ່າ, ‘ຈາກມະນຸດ…’” ພວກເຂົາກໍຢ້ານປະຊາຊົນ, ເພາະທຸກຄົນ
ຖືວ່າໂຢຮັນເປັນຜູ້ທຳນວາຍ.[33]ແລ້ວພວກເຂົາຈຶ່ງຕອບ ພຣະເຢຊູເຈົ້າວ່າ, “ພວກເຮົາບໍ່ຮູ້.” ແລ້ວພຣະເຢຊູເຈົ້າກໍຕອບພວກເຂົາວ່າ, “ດັ່ງນັ້ນເຮົາ
ກໍຈະບໍ່ບອກ ພວກເຈົ້າຄືກັນວ່າຂ້ອຍ ເຮັດການເຫລົ່ານີ້ດ້ວຍສິດອັນໃດ.”


generated on Tue Jun 17 19:01:42 2025

12 [1]ແລ້ວ ພຣະເຢຊູເຈົ້າ ກໍໄດ້ເລີ່ມຕົ້ນສອນ ພວກເຂົາ ເປັນຄຳອຸປະມາວ່າ, ພຣະອົງກ່າວວ່າ "ມີຊາຍຄົນຫນຶ່ງເຮັດສວນອະງຸ່ນ,
ເພິ່ນເຮັດຮົ້ວລ້ອມສວນໄວ້, ແລະສະກັດອ່າງເພື່ອໃຊ້ເປັນ ບ່ອນບີບຄັ້ນເອົານ້ຳອະງຸ່ນ. ແລະທັງໄດ້ສ້າງຫໍຄອຍ ເພື່ອເຝົ້າຍາມໄວ້ດ້ວຍ,
ແລະຕໍ່ມາເພິ່ນເອົາ ສວນອະງຸ່ນໃຫ້ຄົນເຊົ່າ, ແລ້ວເພິ່ນກໍອອກເດີນທາງໄປ. [2]ເມື່ອເຖິງເວລາອັນເຫມາະສົມ, ເຂົາກໍໃຫ້ ຄົນຮັບໃຊ້
ຂອງເຂົາມາເພື່ອຮັບເອົາຫມາກອະງຸ່ນຈາກສວນຂອງຕົນ[3]ແຕ່ຄົນເຊົ່າສວນ ໄດ້ຈັບຄົນຮັບໃຊ້ ຄົນນັ້ນມາ ຂ້ຽນຕີ ແລະ
ສົ່ງເຂົາກັບໄປໂດຍບໍ່ໃຫ້ສິ່ງໃດແກ່ເຂົາເລີຍ

[4]ຊາຍຄົນນັ້ນຈຶ່ງສົ່ງຄົນຮັບໃຊ້ ຄົນຫນຶ່ງໄປອີກ, ພວກຄົນເຊົ່າ ສວນກໍທຸບຕີເຂົາ ຈົນຫົວມີບາດແຜ ແລະ ປ່ອຍດ່າດູຖູກ ເຂົາຢ່າງຫນ້າອັບອາຍ.
[5]ເຂົາຈຶ່ງສົ່ງຄົນຮັບໃຊ້ ອີກຄົນຫນຶ່ງໄປຄັ້ງນີ້ພວກເຂົາ ກໍໄດ້ຂ້າຄົນຮັບໃຊ້ຄົນນັ້ນ; ພວກເຂົາກະທຳຢ່າງດຽວກັນນີ້ກັບຄົນອື່ນໆ ອີກຫລາຍໆຄົນ,
ພວກເຂົາກໍຂ້ຽນຕີບາງຄົນແລະຂ້າບາງຄົນ.
[6]ຊາຍຄົນນັ້ນກໍເຫລືອແຕ່ລູກຊາຍຜູ້ ເປັນສຸດທີ່ຮັກຂອງເຂົາ, ເຂົາຈຶ່ງໃຊ້ລູກຄົນນັ້ນໄປເປັນຄົນສຸດທ້າຍ. ເພິ່ນເວົ້າວ່າ, 'ພວກເຂົາ ຄົງຈະໃຫ້
ຄວາມເຄົາຣົບນັບຖືລາວ.'[7]ແຕ່ຄົນເຊົ່າສວນ ເຫລົ່ານັ້ນເວົ້າກັນວ່າ, 'ຄົນນີ້ແຫລະ ເປັນເຈົ້າຂອງມໍຣະດົກ, ໃຫ້ພວກເຮົາ ຂ້າເຂົາ,
ແລ້ວມໍຣະດົກທັງຫມົດຈະຕົກເປັນ ຂອງພວກເຮົາ.'
[8]ພວກເຂົາຈຶ່ງຈັບຕົວລູກຊາຍຄົນນັ້ນຂ້າເຂົາ, ແລ້ວໂຍນຊາກສົບ ຂອງເຂົາຖິ້ມອອກໄປ
ນອກສວນ."[9]ເມື່ອເປັນດັ່ງນັ້ນແລ້ວເຈົ້າຂອງສວນຈະເຮັດຢ່າງໃດ? ເຂົາຈະມາຂ້າຄົນເຊົ່າສວນເຫລົ່ານັ້ນແລະຈະເອົາສວນອະງຸ່ນ ໃຫ້ຄົນອື່ນ.
[10]ພວກເຈົ້າບໍ່ໄດ້ອ່ານ ພຣະຄັມພີ ຂໍ້ນີ້ບໍ່ວ່າ,'ຫີນທີ່ນາຍຊ່າງກໍໄດ້ໂຍນຖິ້ມແລ້ວນັ້ນ, ໄດ້ກາຍເປັນຫີນເສົາ ເອກ.
[11]ສິ່ງນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ ແລະ ເປັນການ ອັດສະຈັນແກ່ ຕາຂອງພວກເຮົາ.'"[12]ພວກເຂົາຈຶ່ງພະຍາຍາມຈະຈັບຕົວ
ພຣະເຢຊູຄຣິດເຈົ້າເພາະພວກເຂົາ ຮູ້ວ່າ ພຣະອົງໄດ້ກ່າວ ຄຳອຸປະມາເພື່ອຕໍ່ສູ້ພວກເຂົາ, ແຕ່ພວກເຂົາຢ້ານປະຊາຊົນ. ດັ່ງນັ້ນ
ພວກເຂົາຈຶ່ງປະພຣະອົງແລະຈາກໄປ.
[13]ດັ່ງນັ້ນພວກເຂົາຈຶ່ງສົ່ງພວກຟາຣີຊາຍບາງຄົນແລະພັກພວກຂອງເຮໂຣດມາເພື່ອຄອຍຈັບຜິດ ໃນຄຳເວົ້າ ຂອງພຣະອົງ.
[14]ເມື່ອພວກເຂົາມາເຖິງພວກເຂົາເວົ້າກັບພຣະອົງວ່າ "ອາຈານເອີຍ, ພວກເຮົາຮູ້ວ່າ ທ່ານບໍ່ໄດ້ເຫັນແກ່ຄວາມຄິດເຫັນຂອງຜູ້ໃດ
ເພາະທ່ານບໍ່ເຫັນແກ່ຫນ້າຜູ້ໃດ. ແຕ່ທ່ານສັ່ງສອນຄວາມຈິງ ໃນທາງຂອງພຣະເຈົ້າຢ່າງແທ້ຈິງ.
ການທີ່ເສັຽພາສີໃຫ້ແກ່ກາຍຊານັ້ນຖືກຕ້ອງຕາມກົດບັນຍັດບໍ? ພວກເຮົາຄວນເສັຽຫລືບໍ່ເສັຽ?"[15]ແຕ່ພຣະເຢຊູເຈົ້າຮູ້ເຖິງອຸບາຍຂອງພວກເຂົາ
ພຣະອົງຈຶ່ງຕອບພວກເຂົາວ່າ, ເປັນຫຍັງພວກເຈົ້າຈຶ່ງມາທົດລອງເຮົາ? ຈົ່ງນຳເງິນ ຫລຽນເດນາລີອົນມາໃຫ້ເຮົາເບິ່ງຈັກຫນຶ່ງຫລຽນ."
[16]ພວກເຂົາ ກໍນຳຫລຽນຫນຶ່ງມາໃຫ້ ພຣະເຢຊູເຈົ້າ. ພຣະອົງຈຶ່ງຖາມວ່າ"ຮູບແລະຄຳຈາຣຶກນີ້ເປັນຂອງຜູ້ໃດ?"ພວກເຂົາຕອບວ່າ,
"ເປັນຂອງກາຍຊາ."[17]ພຣະເຢຊູເຈົ້າ ກ່າວວ່າ, "ສິ່ງທີ່ເປັນຂອງກາຍຊາຈົ່ງຄືນໃຫ້
ແກ່ກາຍຊາແລະສິ່ງທີ່ເປັນຂອງພຣະເຈົ້າຈົ່ງສົ່ງຄືນແກ່ພຣະເຈົ້າ."ພວກເຂົາຕ່າງກໍປະຫລາດໃຈ ໃນພຣະອົງ.
[18]ແລ້ວພວກຊາດູກາຍຄືພວກທີ່ເຄີຍເວົ້າວ່າ, ບໍ່ມີການເປັນຄືນມາຈາກຄວາມຕາຍກໍໄດ້ມາຫາພຣະອົງ. ພວກເຂົາຖາມພຣະອົງວ່າ,
[19]"ທ່ານອາຈານ, ໂມເຊໄດ້ຂຽນຖ້ອຍຄຳເອົາໄວ້ໃຫ້ກັບພວກເຮົາ ວ່າ, 'ຖ້າພີ່ນ້ອງຂອງຊາຍຄົນຫນຶ່ງ ຕາຍໄປແລະໄດ້ປະເມັຽໄວ້ໂດຍທີ່ຍັງ
ບໍ່ທັນມີລູກ, ພີ່ນ້ອງຂອງລາວສົມຄວນຮັບເອົາເມັຽຂອງລາວມາເປັນເມັຽແລະມີລູກດ້ວຍກັນເພື່ອສືບເຊື້ອສາຍ.
[20]ມີພີ່ນ້ອງທັງຫມົດເຈັດຄົນນຳກັນ, ອ້າຍກົກໄດ້ເອົາເມັຽແລ້ວ ຕາຍໄປໂດຍ ບໍ່ມີລູກ.
[21]ພີ່ນ້ອງຄົນທີ່ສອງກໍໄດ້ຮັບເອົາຍິງນັ້ນມາເປັນເມັຽຈາກນັ້ນລາວກໍຕາຍໄປອີກໂດຍບໍ່ມີລູກຈາກນັ້ນພີ່ນ້ອງຄົນທີ່ສາມກໍເປັນເຊັ່ນນັ້ນເຫມືອນກັນ.
[22]ຈົນມາເຖິງພີ່ນ້ອງຄົນທີ່ເຈັດຍັງບໍ່ມີລູກ, ແລ້ວໃນທີ່ສຸດຍິງຄົນນັ້ນ ກໍຕາຍໄປເຫມືອນກັນ.[23]ໃນການເປັນຄືນມາຈາກຄວາມຕາຍ
ເມື່ອພວກເຂົາທຸກຄົນ, ເປັນຄືນມາສູ່ຊີວິດນັ້ນ, ຜູ້ຍິງຄົນນີ້ ຈະເປັນ ເມັຽຂອງຜູ້ໃດ? ດ້ວຍວ່າ,
ຊາຍທັງເຈັດຄົນກໍໄດ້ເປັນຜົວຂອງນາງທຸກຄົນແລ້ວ."
[24]ພຣະເຢຊູເຈົ້າຕອບວ່າ,"ນີ້ຄືເຫດຜົນທີ່ເຮັດໃຫ້ພວກເຈົ້າເຂົ້າໃຈຜິດສາແລ້ວ,
ເພາະພວກເຈົ້າບໍ່ຮູ້ຈັກພຣະຄັມພີແລະບໍ່ຮູ້ຈັກຣິດເດດຂອງພຣະເຈົ້າ.[25]ເພາະເມື່ອພວກເຂົາເປັນຂຶ້ນມາຈາກຄວາມຕາຍແລ້ວພວກເຂົາຈະບໍ່ມີ,
ການແຕ່ງງານຫລືຍົກກັນໃຫ້ເປັນຜົວເມັຽ ອີກ, ແຕ່ພວກເຂົາຈະເປັນເຫມືອນທູດສະຫວັນທີ່ຢູ່ໃນສະຫວັນ.
[26]ແຕ່ກຽວກັບເລື່ອງຄົນຕາຍ ທີ່ຖືກເຮັດໃຫ້ເປັນຄືນມານັ້ນ, ພວກເຈົ້າບໍ່ເຄີຍອ່ານຫນັງສືຂອງໂມເຊທີ່ບັນທຶກເອົາໄວ້. ເລື່ອງພຸ່ມໄມ້,
ທີ່ພຣະເຈົ້າໄດ້ກ່າວແກ່ໂມເຊດັ່ງນີ້: 'ເຮົາເປັນພຣະເຈົ້າ ຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ
ແລະພຣະເຈົ້າຂອງຢາໂຄບ.'[27]ພຣະອົງບໍ່ໄດ້ເປັນພຣະເຈົ້າຂອງຄົນຕາຍ, ແຕ່ເປັນພຣະເຈົ້າຂອງຄົນເປັນ,
ພວກເຈົ້າຫລົງຜິດໄປຢ່າງໃຫຍ່ຫລວງແລ້ວ."
[28]ມີທັມະຈານຄົນຫນຶ່ງມາເຖິງແລະໄດ້ຍິນການຖົກຖຽງກັນຂອງພວກເຂົາ; ລາວໄດ້ຍິນວ່າພຣະເຢຊູເຈົ້າຕອບຄຳຖາມຂອງຄົນເຫລົ່ານັ້ນໄດ້ດີ.
ລາວຈຶ່ງຖາມພຣະອົງວ່າ,"ກົດບັນຍັດຂໍ້ໃດສຳຄັນຫລາຍທີ່ສຸດ?"[29]ພຣະເຢຊູເຈົ້າ ຕອບລາວວ່າ, "ກົດບັນຍັດຂໍ້ສຳຄັນທີ່ສຸດຄືດັ່ງນີ້
'ຈົ່ງຟັງອິສະຣາເອນເອີຍ ອົງພຣະຜູ້ເປັນເຈົ້າຄືພຣະເຈົ້າຂອງເຮົາ ອົງພຣະຜູ້ເປັນເຈົ້າຊົງເປັນຫນຶ່ງດຽວ.[30]ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າ
ດ້ວຍສຸດຄວາມຄິດ ແລະດ້ວຍສຸດກຳລັງຂອງເຈົ້າ.'[31]ພຣະບັນຍັດຂໍ້ທີສອງນັ້ນຄື: 'ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ.'
ບໍ່ມີພຣະບັນຍັດໃດທີ່ຍິ່ງໃຫຍ່ກວ່ານີ້ອີກແລ້ວ."
[32]ທັມະຈານຄົນນັ້ນເວົ້າວ່າ, "ດີແລ້ວ ອາຈານເອີຍ ທີ່ທ່າໄດ້ກ່າວນັ້ນຖືກແລ້ວທີ່ວ່າ,
ພຣະເຈົ້າເປັນຫນຶ່ງດຽວແລະບໍ່ມີພຣະເຈົ້າອົງອື່ນນອກຈາກພຣະອົງ.[33]ການທີ່ຈະຮັກພຣະເຈົ້າດ້ວຍສິ້ນສຸດໃຈ
ແລະດ້ວຍສິ້ນສຸດຈິດດ້ວຍສຸດຄວາມຄິດແລະດ້ວຍສຸດກຳລັງແລະການຮັກເພື່ອນບ້ານ ເຫມືອນຮັກຕົນເອງນັ້ນ
ກໍດີກວ່າການເຜົາຂອງຖວາຍແລະເຄື່ອງບູຊາ ທັງສິ້ນ"[34]ເມື່ອພຣະເຢຊູເຈົ້າເຫັນວ່າ ລາວໃຫ້ຄຳຕອບດ້ວຍຄວາມສະຫລາດ
ພຣະອົງຈຶ່ງບອກລາວວ່າ, "ເຈົ້າບໍ່ໄດ້ຢູ່ຫ່າງໄກຈາກອານາຈັກ ຂອງພຣະເຈົ້າເລີຍ." ຫລັງຈາກນັ້ນ, ບໍ່ມີຜູ້ໃດກ້າຖາມຄຳຖາມໃດໆຕໍ່ພຣະອົງ ອີກ
[35]ແລະພຣະເຢຊູເຈົ້າ ກຳລັງສັ່ງສອນໃນ ພຣະວິຫານຢູ່ນັ້ນ; ພຣະອົງໄດ້ຖາມວ່າ,"ພວກທັມະຈານເວົ້າຢ່າງໃດໃນເລື່ອງພຣະຄຣິດ
ເປັນບຸດຂອງດາວິດ?[36]ດາວິດເອງໄດ້ ກ່າວດ້ວຍພຣະວິນຍານບໍຣິສຸດເຈົ້າວ່າ,'ພຣະເຈົ້າກ່າວກັບອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍວ່າ,


generated on Tue Jun 17 19:01:42 2025

ຈົ່ງນັ່ງທີ່ເບື້ອງຂວາມືຂອງເຮົາ ຈົນກວ່າເຮົາຈະເຮັດໃຫ້ບັນດາສັດຕຣູຂອງເຈົ້າໃຫ້ລົງຢູ່ໃຕ້ຕີນຂອງເຈົ້າ.’[37]ແມ່ນແຕ່
ກະສັດດາວິດເອງຍັງເອີ້ນພຣະຄຣິດວ່າ, ອົງພຣະຜູ້ເປັນເຈົ້າ’ແລ້ວ ພຣະເມຊີອາຈະເປັນ ເຊື້ອສາຍຂອງດາວິດໄດ້ຢ່າງໃດ?”ປະຊາຊົນ
ກຸ່ມໃຫຍ່ກຳລັງຟັງພຣະອົງດ້ວຍຄວາມຍິນດີ.
[38]ໃນ ຄຳສອນຂອງພຣະອົງ ພຣະເຢຊູເຈົ້າກ່າວວ່າ, “ຈົ່ງຣະວັງພວກທັມະຈານ, ພວກເຂົາ ມັກນຸ່ງເສື້ອລ່າມ
ຍ່າງໄປມາແລະມັກໃຫ້ຄົນຄຳນັບໃນທີ່ຊຸມນຸມຊົນ,[39]ບ່ອນນັ່ງ
ອັນສຳຄັນໃນທັມະສາລາແລະມີຕຳແຫນ່ງສຳຄັນໃນເທສະການຕ່າງໆ[40]ພວກເຂົາບຽດບຽນທີ່ຢູ່ອາສັຍຂອງຍິງແມ່ຫມ້າຍ ແລະ
ພວກເຂົາອະທິຖານດ້ວຍຄຳອະທິຖານຍືດຍາວເພື່ອໃຫ້ຜູ້ຄົນ. ຫລຽວເຫັນພວກນີ້ຈະຖືກໂທດຢ່າງຫນັກ.”
[41]ນັ່ງຢູ່ໃກ້ກັບບໍຣິເວນທີ່ວາງຕູ້ຖວາຍໃນພຣະວິຫານ, ພຣະອົງ ກໍສັງເກດ ເບິ່ງປະຊາຊົນໃນຂະນະທີ່ພວກເຂົາປ່ອນເງິນລົງໃນຕູ້ຖວາຍ
ຄົນຮັ່ງມີຫລາຍຄົນ ໄດ້ປ່ອນເງິນລົງຢ່າງຫລວງຫລາຍ.[42]ແລ້ວ
ມີແມ່ຫມ້າຍທີ່ຍາກຈົນຄົນຫນຶ່ງເອົາເງິນຈຳນວນສອງຫລຽນທີ່ມີຄ່າປະມານສາມສິບຫ້າສະຕາງມາປ່ອນລົງໃນຕູ້ຖວາຍນັ້ນ.
[43]ແລະພຣະອົງຈຶ່ງເອີ້ນພວກສາວົກຂອງພຣະອົງມາແລະກ່າວແກ່ພວກເພິ່ນວ່າ,“ເຮົາ ບອກຄວາມຈິງແກ່ເຈົ້າທັງຫລາຍວ່າ, ‘ແມ່ຫມ້າຍຍາກຈົນ
ຄົນນີ້ໄດ້ໃສ່ເງິນລົງບໍຣິຈາກ ຫລາຍກວ່າ ຄົນອື່ນທັງຫມົດ.[44]ເພາະຄົນອື່ນນັ້ນເອົາເງິນສ່ວນທີ່ເຫລືອຈາກທີ່ພວກເຂົາມີຢ່າງບໍຣິບູນ.
ແຕ່ຍິງຫມ້າຍຄົນນີ້, ມີຄວາມຂັດສົນແຕ່ລາວໃຫ້ທັງຫມົດທີ່ຕົນມີຢູ່ສຳລັບລ້ຽງຊີວິດຂອງຕົນ.

 generated on Tue Jun 17 19:01:42 2025

13 [1]ເມື່ອພຣະເຢຊູເຈົ້າກຳລັງຍ່າງອອກຈາກພຣະວິຫານໄປ, ສາວົກ ຄົນຫນຶ່ງກໍເວົ້າກັບພຣະອົງວ່າ, “ອາຈານ, ເບິ່ງແມ ກ້ອນຫີນອັນງົດງາມ
ແລະ ຕຶກອາຄານກໍງາມແທ້ໆ!”[2]ພຣະອົງເຈົ້າຕອບເຂົາວ່າ, “ເຈົ້າເຫັນຕຶກໃຫຍ່ເຫລົ່ານັ້ນບໍ? ບໍ່ພຽງແຕ່ຫີນກ້ອນຫນຶ່ງຈະທັບໃສ່ກ້ອນອື່ນ
ຊຶ່ງຈະບໍ່ຖືກທຳລາຍລົງ.”

[3]ເມື່ອພຣະອົງນັ່ງຢູ່ເທິງ ພູເຂົາຫມາກກອກເທດ ກົງກັນຂ້າມກັບພຣະວິຫານ, ເປໂຕ, ຢາໂກໂບ, ໂຢຮັນ ແລະ ອັນເດອາ
ໄດ້ຖາມພຣະອົງເປັນການສ່ວນຕົວວ່າ,[4]“ບອກພວກເຮົາແດ່ວ່າ ສິ່ງເຫລົ່ານີ້ຈະເກີດຂຶ້ນເມື່ອໃດ? ແລະ
ສິ່ງໃດຈະເປັນສັນຍານວ່າສິ່ງເຫລົ່ານີ້ກຳລັງຈະເກີດຂຶ້ນ?.”
[5]ພຣະເຢຊູເຈົ້າບອກພວກເຂົາວ່າ,“ຈົ່ງຣະວັງເພື່ອທີ່ຈະບໍ່ມີຜູ້ໃດຫລອກລວງພວກເຈົ້າ ໃຫ້ຫລົງ.[6]ດ້ວຍວ່າ,
ຈະມີຫລາຍຄົນຈະມາໃນນາມຂອງເຮົາແລະບອກວ່າ, ‘ເຮົາຄືຜູ້ນັ້ນແລະພວກເຂົາຈະນຳຄົນເປັນຈຳນວນຫລາຍໃຫ້ຫລົງເສັຽໄປ.
[7]ເມື່ອທ່ານໄດ້ຍິນກຽວກັບການເຮັດເສິກສົງຄາມນັ້ນ ຢ່າສະທ້ານຢ້ານກົວເລີຍ. ເພາະສິ່ງເຫລົ່ານີ້ ຈຳເປັນຕ້ອງ ເກີດຂຶ້ນ ແຕ່ວັນສຸດທ້າຍ ຍັງ
ບໍ່ໄດ້ມາເຖິງ.[8]ເພາະ, ປະຊາຊາດຈະລຸກຂຶ້ນຕໍ່ສູ້ກັບປະຊາຊາດ, ແລະ ຣາຊະອານາຈັກຈະຕໍ່ສູ້ກັບຣາຊະອານາຈັກ. ທັງຈະ ເກີດແຜ່ນດິນ
ໄຫວໃນບ່ອນຕ່າງໆ ແລະຈະເກີດການອຶດຢາກ, ເຫດການເຫລົ່ານີ້ເປັນການເລີ່ມຕົ້ນ ຂອງຄວາມທຸກລຳບາກ.
[9]ແຕ່ຈົ່ງລະວັງຕົວທ່ານໃຫ້ດີ. ພວກເຂົາ ຈະມອບພວກເຈົ້າຂຶ້ນສານແລະຈະຖືກຂ້ຽນຕີ ໃນທຳມະສາລາ.
ພວກເຈົ້າຈະຢືນຢູ່ຕໍ່ຫນ້າເຈົ້າເມືອງແລະກະສັດເພື່ອທີ່ຈະເປັນພະຍານຕໍ່ພວກເຂົາເພາະເຫັນແກ່ເຮົາ.
[10]ແຕ່ຂ່າວປະເສີດຈຳເປັນຕ້ອງຖືກປະກາດອອກໄປເຖິງຄົນທຸກຊາດກ່ອນ.
[11]ເມື່ອພວກເຂົາຈັບກຸມເຈົ້າແລະມອບຕົວເຈົ້າໄວ້, ຈົ່ງຢ່າກັງວົນວ່າເຈົ້າຈະເວົ້າຫຍັງ ເພາະໃນຊົ່ວໂມງນັ້ນ
ຈະມີຖ້ອຍຄຳສົ່ງມາໃຫ້ເຈົ້າຊຶ່ງຄຳເວົ້ານັ້ນ ບໍ່ແມ່ນເຈົ້າເອງເປັນຜູ້ເວົ້າ, ແຕ່ແມ່ນພຣະວິນຍານບໍຣິສຸດເຈົ້າ.[12]ອ້າຍນ້ອງຕ່າງຄົນ ກໍຈະມອບກັນ
ແລະກັນ ໄວ້ພໍ່ກໍຈະມອບລູກ ແລະ ລູກກໍຈະລຸກຂຶ້ນຕໍ່ສູ້ພໍ່ແມ່ໃຫ້ເຖິງ ແກ່ຄວາມຕາຍ.[13]ທຸກຄົນຈະກຽດຊັງພວກເຈົ້າເພາະນາມຂອງເຮົາ,
ແຕ່ຜູ້ໃດອົດທົນໄດ້ຈົນເຖິງທີ່ສຸດຜູ້ນັ້ນຈະລອດພົ້ນ.”
[14]“ເມື່ອໃດເຈົ້າເຫັນ ສິ່ງທີ່ຫນ້າກຽດຫນ້າຊັງ’ ທີ່ເຮັດໃຫ້ຮົກຮ້າງຫວ່າງເປົ່າ (ພິຈາຣະນາອີກຄັ້ງ)
ຕັ້ງຢູ່ໃນທີ່ໆບໍ່ຄວນຈະຕັ້ງໄວ້( ໃຫ້ຜູ້ອ່ານເຂົ້າໃຈເອົາເອງເຖີດ).
ຄົນເຫລົ່ານັ້ນທີ່ຢູ່ໃນແຂວງຢູດາຍຈົ່ງຫນີໄປຍັງພູເຂົາ[15]ຜູ້ທີ່ຢູ່ເທິງຫລັງຄາເຮືອນຢ່າໄດ້ລົງມາແລະເຂົ້າໄປໃນເຮືອນເກັບເອົາສິ່ງຂອງອອກໄປ.
[16]ຜູ້ທີ່ຢູ່ໃນທົ່ງນາກໍຢ່າກັບຄືນມາເອົາເສື້ອຜ້າຂອງຕົນ.
[17]ແຕ່ ວິບັດຈະເກີດຂຶ້ນຕໍ່ຜູ້ຍິງທີ່ຖືພາແລະຄົນທີ່ລ້ຽງລູກອ່ອນກິນນົມຢູ່[18]ຈົ່ງພາວັນນາອະທິຖານ ເພື່ອວ່າ ເຫດການນີ້ຈະບໍ່ເກີດຂຶ້ນໃນຣະດູຫນາວ.
[19]ເພາະຈະມີຄວາມທຸກລຳບາກຢ່າງຫນັກຫນ່ວງ, ຢ່າງບໍ່ເຄີຍ ມີມາກ່ອນຕັ້ງແຕ່ຕົ້ນເດີມ, ເມື່ອພຣະເຈົ້າຊົງສ້າງໂລກຈົນເຖິງທຸກວັນນີ້,
ແລະຈະບໍ່ມີເຫດການເຊັ່ນນີ້ອີກຈັກເທື່ອ.[20]ຖ້າ ອົງພຣະຜູ້ເປັນເຈົ້າຊົງເຮັດໃຫ້ວັນເຫລົ່ານັ້ນສັ້ນເຂົ້າ, ກໍຈະບໍ່ມີ ຜູ້ໃດລອດຊີວິດໄດ້ເລີຍ,
ແຕ່ເພາະເຫັນແກ່ພວກທີ່ ພຣະອົງໄດ້ເລືອກໄວ້ແລ້ວນັ້ນພຣະອົງໄດ້ເຮັດໃຫ້ວັນເຫລົ່ານັ້ນສັ້ນເຂົ້າ.
[21]ແລ້ວຖ້າໃຜບາງຄົນບອກເຈົ້າທັງຫລາຍ ວ່າ, ‘ເບິ່ງແມ! ພຣະຄຣິດຢູ່ທີ່ນີ້’ຫລືວ່າ‘ເບິ່ງດູ ພຣະອົງຢູ່ທີ່ນັ້ນ’ ຈົ່ງຢ່າເຊື່ອຄຳບອກນັ້ນ.
[22]ເພາະພຣະຄຣິດປອມແລະຜູ້ທຳນວາຍປອມ ຈະປາກົດຕົວອອກມາຈະເຮັດການອັດສະຈັນ, ແລະຫມາຍສຳຄັນຕ່າງໆ ເພື່ອຈະຫລອກລວງ,
ແມ່ນວ່າຈະເປັນຜູ້ທີ່ພຣະເຈົ້າຊົງເລືອກໄວ້.[23]ຈົ່ງຣະວັງຕົວໄວ້ໃຫ້ດີ, ເຮົາໄດ້ບອກເລື່ອງນີ້ແກ່ເຈົ້າທຸກຄົນກ່ອນທີ່ເຫດການເຫລົ່ານັ້ນຈະເກີດຂຶ້ນ.”
[24]ແຕ່ຫລັງຈາກວັນເວລາແຫ່ງຄວາມທຸກຍາກຄັ້ງຍິ່ງໃຫຍ່ເຫລົ່ານັ້ນ. ດວງອາທິດ ຈະມືດໄປ, ດວງຈັນຈະບໍ່ສ່ອງແສງ,
[25]ດວງດາວຈະຕົກລົງຈາກຟ້າແລະ ຣິດອຳນາດ ທີ່ມີໃນສະຫວັນ ກໍຈະສັ່ນສະທ້ານຫວັ່ນໄຫວ.[26]ເມື່ອນັ້ນພວກ ເຂົາຈະ
ເຫັນ‘ບຸດມະນຸດສະເດັດມາໃນເມກ’ ດ້ວຍຣິດທານຸພາບ ແລະ ພຣະສະຫງ່າຣາສີ ອັນຍິ່ງໃຫຍ່.
[27]ພຣະອົງຈະສົ່ງທູດສະຫວັນຂອງພຣະອົງມາເພື່ອຮວບຮວມເອົາຄົນທັງຫລາຍທີ່ພຣະເຈົ້າຊົງເລືອກໄວ້ດ້ວຍກັນຈາກທິດທັງສີ່,
ຕັ້ງແຕ່ທີ່ສຸດປາຍແຜ່ນດິນຈົນເຖິງທີ່ສຸດຂອບຟ້າ.”
[28]ຈົ່ງຮຽນຮູ້ບົດຮຽນ ຄຳອຸປະມາ ຈາກຕົ້ນຫມາກເດື່ອ. ເມື່ອກິ່ງມັນເລີ່ມແຕກໃບອ່ອນອອກມາ,
ເຈົ້າກໍຮູ້ວ່າຣະດູຮ້ອນໃກ້ເຂົ້າມາແລ້ວ[29]ໃນທຳນອງດຽວກັນ, ເມື່ອພວກເຈົ້າເຫັນສິ່ງເຫລົ່ານີ້ ເກີດຂຶ້ນ ເຈົ້າກໍຈະຮູ້ວ່າ
ພຣະອົງໃກ້ເຂົ້າມາແລ້ວຢູ່ທີ່ຫນ້າປະຕູ.
[30]ເຮົາບອກຄວາມຈິງ, ແກ່ເຈົ້າທັງຫລາຍວ່າ, ຄົນສະໄຫມນີ້ຈະ ຍັງບໍ່ລ່ວງລັບໄປກ່ອນທີ່ ເຫດການເຫລົ່ານີ້ຈະເກີດຂຶ້ນ.[31]ຟ້າສະຫວັນ ແລະ
ແຜ່ນດິນໂລກຈະລ່ວງພົ້ນໄປ, ແຕ່ຖ້ອຍຄຳຂອງເຮົາຈະບໍ່ສູນຫາຍໄປ.[32]ແຕ່ບໍ່ມີໃຜຮູ້ກຽວກັບວັນຫລື ຊົ່ວໂມງນັ້ນ, ແມ່ນແຕ່ເທວະດາໃນສະຫວັນ
ແລະ ພຣະບຸດກໍບໍ່ຮູ້, ຮູ້ແຕ່ພຣະບິດາເຈົ້າອົງດຽວເທົ່ານັ້ນ.
[33]ຈົ່ງຕື່ນຕົວຈົ່ງເຝົ້າຣະວັງຢູ່ເພາະ ເຈົ້າທັງຫລາຍບໍ່ຮູ້ວ່າເວລານັ້ນຈະມາເຖິງເມື່ອໃດ.[34]ເຊັ່ນດຽວກັບຊາຍຄົນຫນຶ່ງທີ່ອອກເດີນທາງໄປ
ເພິ່ນອອກຈາກ ເຮືອນ ຂອງເພິ່ນ ແລະ ໄດ້ມອບຫມາຍໃຫ້ຄົນຮັບໃຊ້ ຮັບຜິດຊອບເຮັດວຽກຂອງໃຜລາວແລະສັ່ງຄົນເຝົ້າຍາມ ເຮືອນໄວ້ໃຫ້ດີ.
[35]ດັ່ງນັ້ນ ຈົ່ງເຝົ້າຣະວັງຕຽມພ້ອມຢູ່, ເພາະ ເຈົ້າທັງຫລາຍ ບໍ່ຮູ້ວ່າເຈົ້າຂອງເຮືອນຈະກັບມາຍາມໃດບໍ່ວ່າ ຈະເປັນຫົວຄ່ຳຫລື
ຕອນທ່ຽງຄືນຫລືຕອນໄກ່ຂັນຫລືໃນຕອນເຊົ້າ.[36]ຖ້າເຂົາມາຢ່າງບໍ່ທັນຮູ້ຕົວກໍຢ່າໃຫ້ເຂົາພົບເຈົ້າທັງຫລາຍ ນອນຫລັບຢູ່.
[37]ເຮົາບອກເຈົ້າແລະບອກທຸກຄົນວ່າຈົ່ງເຝົ້າຣະວັງຢູ່.”


generated on Tue Jun 17 19:01:42 2025

14 [1]ຍັງອີກສອງວັນ ກໍຈະເຖິງເທສະການປັດສະຄາ ແລະ ເທສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ. ພວກຫົວໜ້າປະໂລຫິດ ແລະ ພວກທັມະຈານ
ຕ່າງກໍຄິດຫາອຸບາຍຈັບພຣະເຢຊູເຈົ້າ ເພື່ອຈະ ສັງຫານພຣະອົງ.[2]ຄືພວກເຂົາເວົ້າຕໍ່ກັນ ແລະ ກັນວ່າ,
“ພວກເຮົາບໍ່ຕ້ອງເຮັດຍາມເທສະການ, ບໍ່ດັ່ງນັ້ນປະຊາຊົນອາດຈະລຸກຮືຂຶ້ນກໍໄດ້.”

[3]ໃນເວລາດຽວກັນນັ້ນພຣະເຢຊູເຈົ້າ ໄດ້ໄປທີ່ເຮືອນຂອງຊີໂມນ, ຊາຍທີ່ເປັນໂຣກຂີ້ທູດ, ໃນບ້ານເບັດທານີ,
ຂະນະທີ່ພຣະເຢຊູເຈົ້າຮັບປະທານຢູ່ນັ້ນ, ກໍມີຍິງຜູ້ຫນຶ່ງໄດ້ມາຫາພຣະອົງ ທັງຖືເຕົ້າຫີນຂາວຊຶ່ງ ບັນຈຸນໍ້າມັນຫອມລາຄາແພງຊະນິດຫນຶ່ງ.
ນາງຫັກຄໍເຕົ້ານັ້ນ ແລະ ຖອກນໍ້າມັນຫອມຫົດສົ່ງຫົວພຣະອົງ.[4]ມີບາງຄົນໃນທີ່ນັ້ນໃຈຮ້າຍ ຈຶ່ງເວົ້າຕໍ່ກັນວ່າ,
“ເຫດໃດຈຶ່ງເຮັດໃຫ້ນໍ້າມັນຫອມນີ້ເສັຽໄປລ້າໆ?[5]ຖ້າຂາຍກໍຄົງໄດ້ກວ່າສາມຮ້ອຍຫລຽນເງິນ, ແລະ ເພື່ອເອົາໄປແຈກໃຫ້ຄົນຍາກຈົນ.”
ແລ້ວພວກເຂົາກໍຕໍາຫນິຕິຕຽນ ຍິງຜູ້ນີ້.
[6]ແຕ່ພຣະເຢຊູເຈົ້າກ່າວວ່າ, “ປະນາງໄວ້, ພວກເຈົ້າກວນໃຈນາງ ເຮັດຫຍັງ? ນາງໄດ້ເຮັດສິ່ງທີ່ຈົບງາມແກ່ເຮົາ.[7]ພວກເຈົ້າຈະມີຄົນຍາກຈົນ
ຢູ່ກັບພວກເຈົ້າສະເຫມີ, ແລະ ພວກເຈົ້າຊ່ວຍພວກເຂົາຍາມໃດກໍໄດ້, ແຕ່ພວກເຈົ້າຈະບໍ່ມີເຮົາສະເຫມີໄປ.[8]ນາງເຮັດເທົ່າທີ່ນາງສາມາດເຮັດໄດ້,
ນາງຖອກນໍ້າມັນຫອມເຈີມໃສ່ຮ່າງກາຍ ຂອງເຮົາເພື່ອຕຽມການປົງສົບຂອງເຮົາລ່ວງຫນ້າ.[9]ເຮົາບອກ ພວກເຈົ້າຄວາມຈິງວ່າ
ໃນທຸກບ່ອນທົ່ວໂລກ ທີ່ມີການປະກາດຂ່າວປະເສີດ, ສິ່ງທີ່ຍິງຜູ້ນີ້ໄດ້ເຮັດຈະເປັນທີ່ເລື່ອງລືກັນໄປ, ເພື່ອເປັນການຣະນຶກເຖິງນາງ.”
[10]ແລ້ວຢູດາອິດສະກາຣີອົດ, ຄົນຫນຶ່ງໃນພວກສາວົກສິບສອງ ຄົນກໍໄດ້ຫນີໄປຫາບັນດາຫົວຫນ້າປະໂລຫິດ, ເພື່ອຈະມອບ
ພຣະເຢຊູເຈົ້າໃຫ້ພວກເຂົາ.[11]ບັນດາຫົວຫນ້າປະໂລຫິດ ດີໃຈ ຫລາຍ ທີ່ໄດ້ຍິນເລື່ອງນີ້ ແລະ ສັນຍາວ່າຈະເອົາເງິນໃຫ້ລາວ. ດັ່ງນັ້ນ
ຢູດາຈຶ່ງຊອກຫາໂອກາດອັນດີເພື່ອຈະມອບພຣະເຢຊູເຈົ້າໃຫ້ພວກເຂົາ.
[12]ໃນວັນທີຫນຶ່ງຂອງເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ, ຄື ວັນທີພວກເຂົາ ຂ້າລູກແກະ, ສາວົກຂອງພຣະອົງໄດ້ຖາມພຣະອົງວ່າ,
“ທ່ານຢາກໃຫ້ພວກຂ້ານ້ອຍ ໄປຈັດແຈ່ງອາຫານປັດສະຄາ ສໍາລັບທ່ານຢູ່ທີ່ໃດ?”[13]ພຣະອົງຈຶ່ງໃຊ້ສາວົກສອງຄົນໄປ ແລະ
ກ່າວກັບພວກເຂົາວ່າ, “ຈົ່ງເຂົ້າໄປໃນເມືອງ, ແລະ ຈະມີຊາຍຄົນຫນຶ່ງ ແບກໄຫນໍ້າມາພົບພວກເຈົ້າ, ເຈົ້າຈົ່ງຕາມຜູ້ນັ້ນໄປ.[14]ລາວຈະ
ເຂົ້າໄປໃນເຮືອນຫລັງໃດ ຈົ່ງເວົ້າກັບເຈົ້າຂອງເຮືອນນັ້ນວ່າ, ‘ອາຈານຖາມວ່າ, ຫ້ອງພັກຂອງເຮົາ
ທີ່ເຮົາຈະກິນອາຫານປັດສະຄາກັບບັນດາສາວົກຂອງເຮົາຢູ່ໃສ?’
[15]ເຈົ້າຂອງເຮືອນ ເຂົາກໍຈະຊີ້ໃຫ້ພວກເຈົ້າເຫັນຫ້ອງໂຖງໃຫຍ່ ຢູ່ຊັ້ນເທິງ ທີ່ຕົບແຕ່ງໄວ້ຮຽບຮ້ອຍແລ້ວ. ທີ່ນັ້ນແລ້ວທີ່ໄດ້ຈັດແຈ່ງທຸກສິ່ງຕຣຽມໄວ້
ສໍາລັບພວກເຮົາ.”[16]ສາວົກສອງຈຶ່ງໄດ້ອອກໄປ ແລະ ໄດ້ເຂົ້າໄປໃນເມືອງ. ພວກເພິ່ນໄດ້ພົບຕາມທີ່ພຣະເຢຊູເຈົ້າໄດ້ບອກໄວ້ທຸກປະການ ແລະ
ພວກເພິ່ນກໍໄດ້ຈັດແຈ່ງອາຫານສໍາລັບປັດສະຄາ.
[17]ເມື່ອເຖິງຕອນຄໍ່າ, ພຣະອົງ ກັບ ພວກສາວົກສິບສອງຄົນກໍໄດ້ເຂົ້າມາ.[18]ເມື່ອພວກເພິ່ນກໍາລັງຮັບປະທານອາຫານເທິງໂຕະ
ຢູ່ນັ້ນພຣະເຢຊູເຈົ້າໄດ້ກ່າວວ່າ, “ເຮົາບອກພວກເຈົ້າຄວາມຈິງວ່າ, ຜູ້ຫນຶ່ງໃນພວກເຈົ້າ ຜູ້ທີ່ຮ່ວມພາເຂົ້າຢູ່ນໍາເຮົານີ້ແຫລະ ຈະທໍຣະຍົດ
ເຮົາ.”[19]ພວກສາວົກ ຕ່າງກໍເປັນທຸກໃຈຫລາຍ ແລະ ຖາມ ພຣະອົງເທື່ອລະຄົນວ່າ, “ທ່ານຄົງບໍ່ຫມາຍເຖິງຂ້ານ້ອຍແມ່ນບໍ່?”
[20]ພຣະເຢຊູເຈົ້າຊົງຕອບວ່າ, “ແມ່ນຄົນຫນຶ່ງ ໃນພວກເຈົ້າ ຈໍານວນສິບສອງຄົນນີ້ແຫລະ ຄືຜູ້ທີ່ເອົາເຂົ້າຈີ່ຈໍ້າຮ່ວມຖ້ວຍດຽວກັນກັບເຮົາ.
[21]ດ້ວຍວ່າ, ບຸດມະນຸດຈະຈາກໄປຕາມທີ່ມີຂຽນໄວ້ໃນພຣະຄັມພີ, ແຕ່ພັຍພິບັດຈະຕົກຖືກຜູ້ທີ່ທໍຣະຍົດບຸດມະນຸດ.
ຖ້າຄົນຜູ້ນີ້ບໍ່ເກີດມາກໍເປັນການດີກວ່າ.”
[22]ໃນລະຫວ່າງອາຫານແລງ ຄາບສຸດທ້າຍນັ້ນ, ພຣະເຢຊູເຈົ້າ ໄດ້ ຈັບເອົາເຂົ້າຈີ່ມາໂມທະນາຂອບພຣະຄຸນແລ້ວ, ພຣະເຢຊູເຈົ້າກໍຫັກເຂົ້າຈີ່ນັ້ນ
ແລະ ຍື່ນໃຫ້ແກ່ພວກສາວົກ ແລະ ກ່າວວ່າ, “ຈົ່ງຮັບເອົາເຖີ້ນນີ້ແຫຼະ
ຄືກາຍຂອງເຮົາ.”[23]ແລ້ວພຣະອົງກໍຈັບເອົາຈອກມາໂມທະນາຂອບພຣະຄຸນ ແລະ ຍື່ນໃຫ້ພວກເພິ່ນ ແລະ ພວກເພິ່ນກໍຮັບດື່ມທຸກຄົນ.
[24]ພຣະເຢຊູເຈົ້າກ່າວວ່າ, “ນີ້ແຫຼະຄື ເລືອດຂອງເຮົາ ແມ່ນເລືອດຂອງພັນທະສັນຍາໃຫມ່ ທີ່ຫລັ່ງໄຫລອອກສໍາລັບຄົນທັງຫລາຍ.
[25]ເຮົາບອກພວກເຈົ້າຄວາມຈິງ ວ່າ ເຮົາຈະບໍ່ດື່ມນໍ້າອະງຸ່ນນີ້ອີກຈັກເທື່ອ ຈົນກວ່າເຖິງວັນນັ້ນຄືເຮົາ ຈະດື່ມອັນໃຫມ່ໃນອານາຈັກຂອງພຣະເຈົ້າ.”
[26]ເມື່ອພວກເຂົາໄດ້ຮ້ອງເພງສັນຣະເສີນ ບົດຫນຶ່ງແລ້ວ, ພວກເພິ່ນກໍພາກັນອອກໄປ ທີ່ພູເຂົາຫມາກກອກເທດ.[27]ພຣະເຢຊູເຈົ້າຊົງກ່າວ
ແກ່ພວກສາວົກວ່າ, “ພວກເຈົ້າທຸກຄົນຈະປະຖິ້ມເຮົາໄປເພາະ ມີຂຽນໄວ້ໃນພຣະຄັມພີວ່າ, ‘ເຮົາຈະປຣະຫານ ຜູ້ລ້ຽງແກະ ແລະ
ຝູງແກະຈະແຕກຊະກັນໄປ.’
[28]ແຕ່ຫລັງຈາກເຮົາເປັນຄືນມາ, ເຮົາຈະໄປທີ່ແຂວງຄາລິເລ ກ່ອນຫນ້າພວກເຈົ້າ.”[29]ເປໂຕເວົ້າວ່າ, “ເຖິງແມ່ນວ່າທຸກຄົນ ຈະປະຖິ້ມທ່ານ
ໄປກໍຕາມຂ້ານ້ອຍຈະບໍ່ປະຖິ້ມທ່ານໄປຈັກເທື່ອ.”
[30]ພຣະເຢຊູເຈົ້າຊົງກ່າວຕອບເຂົາວ່າ, “ເຮົາບອກເຈົ້າຄວາມຈິງວ່າ, ໃນຄືນນີ້ແຫລະ ກ່ອນໄກ່ຂັນສອງເທື່ອ, ເຈົ້າຈະປະຕິເສດວ່າ ບໍ່ຮູ້ຈັກ
ເຮົາເຖິງສາມເທື່ອ.”[31]ແຕ່ເປໂຕໄດ້ຕອບວ່າ, “ເຖິງແມ່ນຂ້ານ້ອຍຈະຕ້ອງຕາຍກັບທ່ານ, ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ.”
ຝ່າຍສາວົກທຸກຄົນຕ່າງກໍສັນຍາຢ່າງນັ້ນ.
[32]ພວກເຂົາກໍມາຮອດສະຖານທີ່ຫນຶ່ງ ທີ່ເອີ້ນວ່າເຄັດເຊມາເນ, ແລະ ພຣະເຢຊູເຈົ້າໄດ້ກ່າວແກ່ບັນດາສາວົກວ່າ, “ຈົ່ງນັ່ງຢູ່ທີ່ນີ້
ໃນຂະນະທີ່ເຮົາພາວັນນາອະທິຖານ.”[33]ພຣະອົງໄດ້ພາເປໂຕ, ຢາໂກໂບ, ແລະ ໂຢຮັນ ໄປກັບພຣະອົງ, ແລະ ພຣະອົງກໍໂສກເສົ້າ ແລະ
ເປັນທຸກໃນໃຈຫລາຍ[34]ຈຶ່ງກ່າວແກ່ພວກເພິ່ນວ່າ, “ຈິດໃຈຂອງເຮົາເປັນທຸກຫນັກ, ແທບຈະຕາຍຢູ່ແລ້ວ. ຈົ່ງເຝົ້າຄອຍ ແລະ ເຝົ້າເບິ່ງຢູ່ທີ່ນີ້ເຖີ້ນ.”
[35]ພຣະເຢຊູເຈົ້າໄດ້ຍ່າງເລີຍໄປໄກຫນ້ອຍຫນຶ່ງ, ກໍໄດ້ຄຸເຂົ່າລົງກັບພື້ນ, ແລ້ວພຣະອົງກໍພາວັນນາອະທິຖານວ່າ,
ຖ້າເປັນໄປໄດ້ຂໍໃຫ້ໂມງເວລາແຫ່ງຄວາມທົນທຸກທໍຣະມານນີ້ຜ່ານພົ້ນໄປຈາກພຣະອົງ.[36]ພຣະອົງອະທິຖານວ່າ, “ພຣະບິດາເຈົ້າເອີຍ, ພຣະບິດາ
ຂອງລູກພຣະອົງເຮັດໄດ້ທຸກສິ່ງ. ຂໍໃຫ້ຈອກແຫ່ງຄວາມທົນທຸກທໍຣະມານນີ້ເລື່ອນພົ້ນໄປຈາກລູກຖ້ອນ, ແຕ່ຂໍຢ່າໃຫ້ເປັນໄປຕາມໃຈປາຖນາ
ຂອງລູກ, ແຕ່ໃຫ້ເປັນໄປຕາມ ພຣະປະສົງຂອງພຣະອົງດ້ວຍເຖີ້ນ.”
[37]ພຣະອົງກໍກັບຄືນມາ ແລະ ໄດ້ພົບພວກສາວົກກໍາລັງນອນ ຫລັບຢູ່, ແລະ ພຣະອົງຊົງກ່າວແກ່ເປໂຕວ່າ, “ຊີໂມນເອີຍ, ເຈົ້າຍັງນອນຫລັບຢູ່ບໍ?
ເຈົ້າບໍ່ສາມາດ ເຝົ້າຢູ່ຈັກຊົ່ວໂມງບໍ?”[38]ຈົ່ງເຝົ້າຣະວັງ ແລະ ພາວັນນາອະທິຖານຢູ່ ເພື່ອຈະບໍ່ຕົກໃນການທົດລອງ. ຈິດວິນຍານພ້ອມຢູ່ແລ້ວກໍຈິງ
ແຕ່ຮ່າງກາຍອ່ອນແຮງ.”[39]ພຣະອົງກັບໄປພາວັນນາອະທິຖານອີກຄັ້ງ ໂດຍກ່າວຖ້ອຍຄໍາເຫມືອນເທື່ອກ່ອນ.

 generated on Tue Jun 17 19:01:42 2025

40ພຣະອົງກັບຄືນມາຫາພວກສາວົກ ແລະ ກໍພົບພວກເພິ່ນ ນອນຫລັບຢູ່, ເພາະພວກເພິ່ນບໍ່ອາດມືນຕາຂຶ້ນໄດ້ເລີຍ ແລະ ບໍ່ຮູ້ວ່າ ຈະເວົ້າຫຍັງ.
41ພຣະອົງໄດ້ກັບຄືນມາເທື່ອທີສາມ ພຣະອົງກໍ ກ່າວແກ່ພວກເພິ່ນວ່າ, “ພວກເຈົ້າຍັງພັກຜ່ອນຫລັບນອນຢູ່ບໍ? ພໍສາ ເວລາມາເຖິງແລ້ວ. ເບິ່ງແມ!
ບຸດມະນຸດກຳລັງຈະຖືກມອບໄວ້ ໃນກຳມືຂອງຄົນບາບທັງຫລາຍ. 42ຈົ່ງລຸກຂຶ້ນພາກັນໄປເທາະ ເບິ່ງແມ! ຄົນທີ່ມອບເຮົາໄວ້ກໍມາທີ່ນີ້ແລ້ວ.”
43ໃນເວລາທີ່ພຣະອົງກ່າວຍັງບໍ່ທັນຂາດຄຳ, ໃນທັນໃດນັ້ນ ຢູດາຜູ້ເປັນສາວົກຄົນຫນຶ່ງ ໃນພວກສາວົກສິບສອງຄົນກໍມາພ້ອມ
ກັບປະຊາຊົນຈຳນວນຫລວງຫລາຍ ທັງຖືດາບ, ທັງຖືໄມ້ຄ້ອນ, ຈາກພວກຫົວໜ້າປະໂລຫິດ, ພວກທັມະຈານ ແລະ ພວກອາວຸໂສ
ໄດ້ໃຊ້ຄົນເຫລົ່ານີ້ມາ. 44ບັດນີ້ຜູ້ທີ່ທໍຣະຍົດຕໍ່ພຣະອົງນັ້ນ ໄດ້ໃຊ້ສັນຍານບອກ ແກ່ພວກເຂົາວ່າ, “ຂ້ອຍຈູບຄຳນັບຜູ້ໃດ, ເພິ່ນກໍແມ່ນຜູ້ນັ້ນແຫລະ,
ຈົ່ງຈັບກຸມຕົວເອົາໄປຮັກສາໄວ້ໃຫ້ດີ.” 45ພໍຢູດາ ມາຮອດເຂົາກໍຫຍັບເຂົ້າໄປໃກ້ພຣະເຢຊູເຈົ້າທັນທີ ແລະ ເວົ້າຕໍ່ ພຣະອົງວ່າ,
“ພຣະອາຈານເອີຍ” ແລ້ວລາວກໍຈູບພຣະອົງ. 46ແລ້ວພວກເຂົາຈຶ່ງຄວ້າຈັບພຣະອົງ ແລະ ຈັບກຸມພຣະອົງໄວ້.
47ແຕ່ມີຄົນຫນຶ່ງໃນຈຳນວນຄົນທີ່ຢືນຢູ່ໃນທີ່ນັ້ນຊັກດາບ ອອກ ຟັນຄົນຮັບໃຊ້ຄົນຫນຶ່ງ ຂອງມະຫາປະໂລຫິດ ຖືກຫູຂາດເບື້ອງຫນຶ່ງ.
48ພຣະເຢຊູເຈົ້າກໍໄດ້ກ່າວແກ່ພວກເຂົາວ່າ, “ພວກເຈົ້າຖືດາບຖື ໄມ້ຄ້ອນອອກມາຈັບເຮົາ ເຫມືອນດັ່ງຈັບໂຈນຊັ້ນບໍ? 49ທຸກໆ
ວັນເມື່ອເຮົາຢູ່ກັບພວກເຈົ້າ ແລະ ໄດ້ສັ່ງສອນໃນພຣະວິຫານ ແລະ ພວກເຈົ້າບໍ່ໄດ້ຈັບເຮົາ. ແຕ່ກ່ຽວກັບເລື່ອງທີ່ເກີດຂຶ້ນນີ້ກໍເພື່ອໃຫ້
ສຳເລັດຕາມທີ່ມີກ່າວໄວ້ໃນພຣະຄັມພີ.” 50ແລ້ວພວກສາວົກ ທັງຫມົດກໍປະຖິ້ມພຣະເຢຊູເຈົ້າ ແລະ ແລ່ນຫນີຈາກພຣະອົງໄປ.
51ມີຊາຍຫນຸ່ມຄົນຫນຶ່ງ, ນຸ່ງພຽງຜ້າປ່ານແຕ່ຜືນດຽວຕາມພຣະເຢຊູເຈົ້າໄປ, ພວກເຂົາໄດ້ຄວ້າຈັບບາຍຊາຍຫນຸ່ມນັ້ນ,
52ແຕ່ຊາຍນັ້ນໄດ້ປະຜ້າປ່ານຜືນທີ່ນຸ່ງຢູ່ນັ້ນຖິ້ມເສັຽ ແລະ ແລ່ນປົບຫນີໄປຕົວເປົ່າ.
53ພວກເຂົາໄດ້ພາພຣະເຢຊູເຈົ້າ ໄປຫາມະຫາປະໂລຫິດ. ບ່ອນທີ່ ພວກຫົວໜ້າປະໂລຫິດ, ພວກເຖົ້າແກ່ ແລະ ພວກທັມະຈານ ທັງຫມົດໄດ້
ປະຊຸມກັນຢູ່ທີ່ນັ້ນ. 54ບັດນີ້ເປໂຕ ກໍໄດ້ຕິດຕາມ ພຣະເຢຊູເຈົ້າ ໄປໃນໄລຍະຫ່າງໄກພໍສົມຄວນ ແລະ
ເຂົ້າໄປໃນເດີ່ນບ້ານຂອງມະຫາປະໂລຫິດແລ້ວ ນັ່ງຜີງໄຟຢູ່ກັບພວກຄົນຍາມ.
55ບັດນີ້ພວກຫົວຫນ້າປະໂລຫິດ ແລະ ພວກສະມາຊິກສະພາຊາວຢິວທັງຫມົດໄດ້ຫາຫລັກຖານ
ມາຕໍ່ສູ້ພຣະເຢຊູເຈົ້າເພື່ອຫວັງຈະຂ້າພຣະອົງເສັຽ. ແຕ່ຫາຫຍັງບໍ່ໄດ້ເລີຍ. 56ດ້ວຍວ່າ, ມີຫລາຍຄົນກ່າວຄຳພະຍານ ຕົວະ ຕໍ່ສູ້ພຣະອົງ,
ແຕ່ຄຳເວົ້າຂອງພວກເຂົາ ຂັດແຍ້ງກັນເອງ.
57ມີບາງຄົນຢືນຂຶ້ນ ແລະ ກ່າວຄຳພະຍານຕົວະຕໍ່ສູ້ພຣະອົງວ່າ, 58“ພວກເຮົາໄດ້ຍິນລາວເວົ້າວ່າ, ‘ເຮົາຈະມ້າງພຣະວິຫານຫລັງນີ້
ທີ່ສ້າງດ້ວຍມືມະນຸດ ແລະ ຫລັງຈາກສາມວັນເຮົາຈະສ້າງຫລັງໜຶ່ງ ຂຶ້ນໃຫມ່
ທີ່ບໍ່ໄດ້ເຮັດດ້ວຍມືມະນຸດ.’” 59ເຖິງປານນັ້ນຄຳພະຍານຂອງພວກເຂົາ ກໍຍັງບໍ່ຖືກຕ້ອງກັນ.
60ມະຫາປະໂລຫິດຈຶ່ງໄດ້ລຸກຢືນຂຶ້ນໃນທ່າມກາງທີ່ປະຊຸມ ແລະ ໄດ້ຖາມພຣະເຢຊູເຈົ້າວ່າ, “ເຈົ້າບໍ່ມີຫຍັງ ບໍ ທີ່ຈະແກ້ຄຳກ່າວຫາທີ່
ຄົນເຫລົ່ານີ້ກ່າວຕໍ່ສູ້ເຈົ້າ?” 61ແຕ່ພຣະເຢຊູເຈົ້າມິດງຽບຢູ່ ແລະ ບໍ່ ຕອບຫຍັງຈັກຄຳ, ແລ້ວມະຫາປະໂລຫິດຈຶ່ງຖາມພຣະອົງອີກວ່າ,
“ເຈົ້າເປັນພຣະຄຣິດ, ພຣະບຸດຂອງພຣະເຈົ້າ, ຜູ້ຊົງພຣະກຽດບໍ?” 62ພຣະເຢຊູເຈົ້າໄດ້ກ່າວວ່າ, “ເຮົາ; ແລະ
ພວກເຈົ້າຈະໄດ້ເຫັນບຸດມະນຸດນັ່ງທີ່ເບື້ອງຂວາຂອງພຣະຜູ້ຊົງຣິດອຳນາດຍິ່ງໃຫຍ່ ແລະ ກຳລັງລົງມາເທິງເມກໃນສະຫວັນ.”
63ມະຫາປະໂລຫິດ ຜູ້ນັ້ນໄດ້ຈີກເສື້ອລ່າມຂອງຕົນ ແລະ ກ່າວ ສຽງດັ່ງວ່າ,
“ພວກເຮົາຍັງຈະຕ້ອງການພະຍານອັນໃດອີກ 64ເຈົ້າທັງຫລາຍກໍໄດ້ຍິນ ຄຳເວົ້າຫມິ່ນປະຫມາດພຣະເຈົ້າແລ້ວ ເຈົ້າທັງຫລາຍ
ຈະຕັດສິນໃຈຢ່າງໃດ?” ພວກເຂົາໃນທີ່ປະຊຸມທັງໝົດ ຈຶ່ງລົງມະຕິວ່າ, ພຣະເຢຊູເຈົ້າຕ້ອງຖືກໂທດປຣະຫານຊີວິດ. 65ມີບາງຄົນໃນພວກເຂົາ
ໄດ້ຖົ່ມນ້ຳລາຍໃສ່ ພຣະເຢຊູເຈົ້າ ພວກເຂົາ ເອົາຜ້າມັດຕາພຣະອົງ ແລະ ທຸບຕີພຣະອົງພວກເຂົາເວົ້າຕໍ່ພຣະເຢຊູເຈົ້າວ່າ, “ທວາຍເບິ່ງດູ!
ວ່າແມ່ນຜູ້ໃດຕີມຶງຢູ່!” ແລ້ວພວກ ທະຫານຍາມກໍຮັບເອົາພຣະອົງໄປຕົບຕີ ແລະ ເອົາໄມ້ແສ້ຂ້ຽນຕີ ພຣະອົງ.
66ຂະນະທີ່ເປໂຕຍັງຢູ່ທາງລຸ່ມທີ່ເດີ່ນບ້ານນັ້ນ, ມີສາວໃຊ້ຄົນ ຫນຶ່ງຂອງມະຫາປະໂລຫິດ. 67ເມື່ອນາງໄດ້ເຫັນເປໂຕນັ່ງຜີງໄຟຢູ່
ນາງກໍຈ້ອງຕາເບິ່ງເພິ່ນ ແລະ ທັວງວ່າ, “ເຈົ້າກໍເຄີຍໄປມາ ກັບ ເຢຊູ ໄທນາຊາເຣັດຄືກັນ.” 68ແຕ່ລາວໄດ້ຕອບປະຕິເສດວ່າ, “ຂ້ອຍ ບໍ່ ຮູ້... ຂ້ອຍ
ບໍ່ເຂົ້າໃຈຄຳທີ່ ເຈົ້າໄດ້ ເວົ້ານັ້ນ,” ແລ້ວເປໂຕ ກໍຍ່າງ ອອກໄປທາງປະຕູບ້ານ ແລະ ໄກ່ກໍຂັນ.
69ສ່ວນສາວໃຊ້ຜູ້ນັ້ນເຫັນເປໂຕ ຈຶ່ງເວົ້າຕໍ່ຄົນທີ່ຢືນຢູ່ໃນທີ່ນັ້ນອີກວ່າ, “ຄົນນີ້ແຫລະ ເປັນຜູ້ຫນຶ່ງໃນພວກເຂົາ.” 70ແຕ່ເປໂຕ ໄດ້ປະຕິເສດອີກ.
ຫລັງຈາກນັ້ນ, ຄົນທີ່ຢືນຢູ່ໃນທີ່ນັ້ນກໍເວົ້າຕໍ່ເປໂຕ ວ່າ, “ແມ່ນແທ້ແລ້ວ ເຈົ້າເປັນຜູ້ຫນຶ່ງໃນພວກນັ້ນ ເພາະເຈົ້າເປັນຄົນ ຄາລີເລເຫມືອນກັນ.”
71ແລ້ວເຂົາກໍເລີ່ມປ້ອຍດ່າສາບແຊ່ງຕົວເອງ ແລະ ສາບານວ່າ, “ຂ້ອຍບໍ່ຮູ້ຈັກຄົນທີ່ພວກເຈົ້າເວົ້າເຖິງນັ້ນ.” 72ໃນທັນໃດນັ້ນ
ໄກ່ກໍຂັນເປັນເທື່ອທີສອງ. ແລ້ວເປໂຕຈຶ່ງຈື່ໄດ້ໃນຄຳທີ່ພຣະເຢຊູເຈົ້າ ໄດ້ກ່າວແກ່ຕົນວ່າ, “ກ່ອນໄກ່ຂັນສອງເທື່ອ ເຈົ້າຈະປະຕິເສດ
ວ່າບໍ່ຮູ້ຈັກເຮົາເຖິງສາມເທື່ອ.” ເມື່ອຫວນຄິດໄດ້ເຂົາຈຶ່ງຮ້ອງໄຫ້ຮ່ຳໄຮ.

 generated on Tue Jun 17 19:01:42 2025

15 [1]ພໍຮຸ່ງເຊົ້າມາ, ບັນດາຫົວຫນ້າປະໂລຫິດ ໄດ້ພົບກັບພວກຜູ້ອາວຸໂສ ແລະ ພວກທັມະຈານ ແລະ
ບັນດາສະມາຊິກສະພາຊາວຢິວທັງຫມົດໄດ້ປຶກສາຫາລືກັນ. ແລ້ວພວກເຂົາໄດ້ມັດ ພຣະເຢຊູເຈົ້າ ແລະ ນຳພາພຣະອົງໄປມອບໃຫ້ປີລາດ.
[2]ສ່ວນປີລາດ ກໍໄດ້ຖາມ ພຣະເຢຊູເຈົ້າວ່າ, “ເຈົ້າເປັນກະສັດຂອງຊາວຢິວບໍ?” ພຣະເຢຊູເຈົ້າຊົງຕອບວ່າ,
“ທ່ານເວົ້ານັ້ນຖືກແລ້ວ.”[3]ພວກຫົວໜ້າປະໂລຫິດໄດ້ກ່າວໂທດໃສ່ພຣະເຢຊູເຈົ້າຫລາຍເລື່ອງ.

[4]ປີລາດຈຶ່ງໄດ້ຖາມພຣະອົງອີກຄັ້ງວ່າ, “ເຈົ້າບໍ່ຕອບຈັກຄຳບໍ? ເບິ່ງແມ! ພວກເຂົາກ່າວຟ້ອງເຈົ້າຕັ້ງຫລາຍເລື່ອງ!”[5]ແຕ່ ພຣະເຢຊູເຈົ້າ
ບໍ່ຕອບຈັກຄຳຈົນປີລາດປະຫລາດໃຈ.
[6]ບັດນີ້ໃນເທສະການປັດສະຄາ, ຕາມປົກະຕິແລ້ວປີລາດຈະ ປ່ອຍນັກໂທດ ຄົນຫນຶ່ງໃຫ້ເປັນອິສຣະ, ຕາມທີ່ປະຊາຊົນໄດ້ຂໍຮ້ອງ.
[7]ມີຊາຍຄົນຫນຶ່ງຊື່ວ່າ ບາຣາບາ, ທີ່ຖືກຂັງຄຸກຮ່ວມກັບ ພວກກະບົດທີ່ໄດ້ຂ້າຄົນ ເນື່ອງຈາກການກະບົດນັ້ນ.[8]ປະຊາຊົນ ໄດ້ໄປຫາປີລາດ ແລະ
ຕັ້ງຕົ້ນຖາມເພິ່ນ ເພື່ອເຮັດຕາມທີ່ເຄີຍໄດ້ປະຕິບັດມາ.
[9]ປີລາດຈຶ່ງໄດ້ຕອບພວກເຂົາວ່າ, “ພວກທ່ານຢາກໃຫ້ ຂ້າພຣະເຈົ້າປ່ອຍກະສັດຂອງຊາວຢິວໃຫ້ແກ່ພວກທ່ານບໍ?”[10]ເພາະປີລາດ ຮູ້ດີວ່າການ
ທີ່ພວກຫົວຫນ້າປະໂລຫິດ ນຳພຣະເຢຊູເຈົ້າມາມອບໃຫ້ແກ່ຕົນນັ້ນ ເພາະຄວາມອິດສາ.[11]ແຕ່ພວກຫົວຫນ້າປະໂລຫິດ ໄດ້ຍຸຍົງປະຊາຊົນ
ເພື່ອຮ້ອງໄຫ້ປີລາດ ປ່ອຍບາຣາບາແທນ ພຣະເຢຊູເຈົ້າ.
[12]ປີລາດ ໄດ້ຕອບພວກເຂົາອີກວ່າ, “ດັ່ງນັ້ນແລ້ວ ພວກທ່ານ ຢາກໃຫ້ຂ້າພຣະເຈົ້າເຮັດຢ່າງໃດກັບ
ກະສັດຂອງຊາວຢິວ?”[13]ພວກເຂົາໄດ້ຮ້ອງຕອບຂຶ້ນວ່າ, “ຄຶງເຂົາໄວ້ທີ່ໄມ້ກາງແຂນ!”
[14]ປີລາດຈຶ່ງໄດ້ຖາມພວກເຂົາວ່າ, “ຊາຍຜູ້ນີ້ໄດ້ເຮັດຜິດຫຍັງ?” ແຕ່ພວກເຂົາຊ້ຳພັດຮ້ອງແຮງຍິ່ງຂຶ້ນວ່າ,
“ຄຶງມັນໄວ້ທີ່ໄມ້ກາງແຂນ.”[15]ປີລາດຕ້ອງການເອົາໃຈປະຊາຊົນ, ເພິ່ນຈຶ່ງໄດ້ປ່ອຍບາຣາບາ ໃຫ້ພວກເຂົາ. ເມື່ອເພິ່ນໄດ້ສັ່ງໃຫ້ເຂົາຂ້ຽນຕີ
ພຣະເຢຊູເຈົ້າ ແລະແລ້ວກໍມອບພຣະອົງ ໃຫ້ຖືກຄຶງໄວ້ທີ່ໄມ້ກາງແຂນ.
[16]ພວກທະຫານໄດ້ນຳເອົາພຣະເຢຊູເຈົ້າ ເຂົ້າໄປໃນເດີ່ນບ້ານ (ຊຶ່ງແມ່ນສຳນັກງານໃຫຍ່ຂອງຣັຖະບານ), ແລະ
ພວກເຂົາກໍເອີ້ນກອງທັບທະຫານທັງຫມົດມາກັນໃນທີ່ນັ້ນ.[17]ພວກເຂົາໄດ້ເອົາເສື້ອສີມ່ວງມາໃຫ້, ແລະ ເອົາເຄືອຫນາມຖັກເປັນໂຄ້ງແທນ
ມົງກຸດມາສຸບໃສ່ຫົວຂອງພຣະອົງ.[18]ພວກເຂົາກໍຕັ້ງຕົ້ນ ຄຳນັບແບບເຢາະເຢີ້ຍພຣະອົງໂດຍກ່າວວ່າ, “ກະສັດແຫ່ງຊາດຢິວເອີຍ,
ຈົ່ງຊົງພຣະຈະເຣີນເຖີ້ນ!”
[19]ພວກເຂົາໃຊ້ໄມ້ອໍ້ຕີຫົວພຣະອົງ ແລະ ຖົ່ມນ້ຳລາຍໃສ່ຫນ້າ ພຣະອົງ ແລະ ຄຸເຂົ່າຂາບລົງທຳທ່າຄຳນັບພຣະອົງ.
[20]ເມື່ອເຢາະເຢີ້ຍພຣະອົງສົມໃຈແລ້ວ. ພວກເຂົາຈຶ່ງແກ້ເສື້ອຄຸມສີມ່ວງອອກ ແລະ ເອົາເຄື່ອງນຸ່ງຂອງພຣະອົງມານຸ່ງໃຫ້ຄືນ,
ແລ້ວນຳພຣະອົງອອກໄປ ເພື່ອຄຶງໄວ້ທີ່ໄມ້ກາງແຂນ.[21]ເມື່ອ ໄປຕາມທາງນັ້ນ ພວກເຂົາ ບັງຄັບໃຫ້ຊາຍຄົນຫນຶ່ງທີ່ຍ່າງຜ່ານມາ
ຊຶ່ງກຳລັງມາແຕ່ບ້ານນອກ ໃຫ້ແບກໄມ້ກາງແຂນຂອງພຣະເຢຊູເຈົ້າ. ຊາຍຄົນນີ້ ຊື່ວ່າຊີໂມນ ໄທ ກີເຣເນເປັນພໍ່ຂອງອາເລັກຊັນເດີ ແລະ ຣູໂຟ.
[22]ພວກທະຫານໄດ້ພາພຣະເຢຊູເຈົ້າໄປສະຖານທີ່ຫນຶ່ງ ທີ່ຄົນເອີ້ນວ່າໂຄລະໂຄທາ (ຊຶ່ງແປຄວາມຫມາຍວ່າ,
“ບ່ອນກະໂຫລກຫົວ.”)[23]ພວກເຂົາໄດ້ເອົາເຫລົ້າອະງຸ່ນ ປົນກັບເຄື່ອງຢາຊະນິດຫນຶ່ງ ໃຫ້ພຣະອົງດື່ມ, ແຕ່ພຣະອົງບໍ່ຍອມດື່ມ.[24]ພວກເຂົາໄດ້ຄຶງ
ພຣະອົງໃສ່ໄມ້ກາງແຂນໄວ້ແລ້ວ ພວກເຂົາກໍເອົາເຄື່ອງນຸ່ງຂອງພຣະອົງມາຈົກສະຫລາກ ແບ່ງປັນກັນເພື່ອຈະຮູ້ວ່າຜູ້ໃດຈະໄດ້ຜືນໃດ.
[25]ເປັນຊົ່ວໂມງທີສາມທີ່ ພວກເຂົາຄຶງພຣະອົງທີ່ໄມ້ກາງແຂນ.[26]ເທິງແຜ່ນປ້າຍ ພວກເຂົາຂຽນຂໍ້ຄວາມຕໍ່ຕ້ານກ່າວຫາພຣະອົງວ່າ,
“ກະສັດຂອງຊາດຢິວ.”[27]ພວກເຂົາ ຍັງໄດ້ຄຶງນັກໂທດຂີ້ລັກສອງຄົນ ພ້ອມກັບພຣະອົງ ເບື້ອງຂວາຄົນຫນຶ່ງ ແລະ ເບື້ອງຊ້າຍອີກຄົນຫນຶ່ງ.
[28]ຕ້ອງສຳເລັດຕາມພຣະຄັມພີທີ່ຂຽນໄວ້ວ່າ"ເພິ່ນຖືກນັບເຂົ້າກັບຄາຕະກອນ".
[29]ປະຊາຊົນຜູ້ທີ່ຜ່ານໄປມາ ຕ່າງກໍເວົ້າຫມິ່ນປະຫມາດ, ດູຖູກ ພຣະອົງ, ທັງສັ່ນຫົວ ແລະ ກ່າວວ່າ, “ເຮີຍ! ເຈົ້າຜູ້ທີ່ມ້າງ ພຣະວິຫານ ແລະ
ຈະສ້າງຂຶ້ນໃຫມ່ໃນສາມວັນ,[30]ຈົ່ງຊ່ວຍຕົນເອງໃຫ້ ພົ້ນແມ ແລະ ຈົ່ງລົງມາຈາກໄມ້ກາງແຂນແມ!”
[31]ໃນທຳນອງດຽວກັນ ພວກຫົວຫນ້າປະໂລຫິດ ກັບພວກ ທັມະຈານ ກໍໄດ້ພາກັນເຢາະເຢີ້ຍພຣະອົງ ໃນທ່າມກາງພວກເຂົາເອງ
ເຫມືອນກັນໂດຍເວົ້າວ່າ, “ມັນຊ່ວຍຜູ້ອື່ນໃຫ້ພົ້ນໄດ້, ແຕ່ຊ່ວຍ ຕົນເອງບໍ່ໄດ້.[32]ຂໍໃຫ້ພຣະຄຣິດ, ກະສັດຂອງຊາດ ອິສະຣາເອນ,
ລົງມາຈາກໄມ້ກາງແຂນດຽວນີ້ເທາະ, ເພື່ອພວກເຮົາ ຈະໄດ້ເຫັນ ແລະ ໄດ້ເຊື່ອ.” ສ່ວນສອງຄົນນັ້ນ ຜູ້ທີ່ຖືກຄຶງໄວ້ທີ່ໄມ້ກາງແຂນ
ພ້ອມກັບພຣະເຢຊູເຈົ້າ ກໍເວົ້າຫມິ່ນປະຫມາດ ພຣະອົງເຫມືອນກັນ.
[33]ໃນເວລາຊົ່ວໂມງທີ່ຫົກ, ທົ່ວແຜ່ນດິນກໍບັງເກີດມີຄວາມມືດ ຈົນເຖິງຊົ່ວໂມງທີ່ເກົ້າ.[34]ເວລາຊົ່ວໂມງທີ່ເກົ້າ
ພຣະເຢຊູເຈົ້າກໍຮ້ອງດ້ວຍສຽງອັນດັງວ່າ, “ເອໂລອີ, ເອໂລອີ, ແລມາ, ສາບັກທານີ?” ຊຶ່ງແປວ່າ, “ພຣະເຈົ້າຂອງຂ້ານ້ອຍ,
ພຣະເຈົ້າຂອງຂ້ານ້ອຍເອີຍ, ດ້ວຍເຫດໃດພຣະອົງຈຶ່ງປະຖິ້ມຂ້ານ້ອຍເສັຽ?”[35]ບາງຄົນໃນ ປະຊາຊົນທີ່ຢືນຢູ່ໃນທີ່ນັ້ນໄດ້ຍິນພຣະອົງຈຶ່ງເວົ້າວ່າ,
“ເບິ່ງແມ! ມັນ ຮ້ອງຫາເອລີຢາ.”
[36]ມີຄົນຫນຶ່ງແລ່ນໄປ, ເອົາຟອງນ້ຳຈຸ່ມເຫລົ້າອະງຸ່ນສົ້ມ ແລະ ສຽບໃສ່ປາຍໄມ້ອໍ້ ແລ້ວຍື່ນຂຶ້ນໃຫ້ພຣະອົງດື່ມ ແລະ ເວົ້າວ່າ,
“ໃຫ້ພວກເຮົາໄດ້ເບິ່ງເອລີຢາ ຈະມາຊ່ວຍມັນລົງຈາກໄມ້ກາງແຂນ".[37]ເມື່ອພຣະເຢຊູເຈົ້າ ຮ້ອງສຽງດັງແລ້ວກໍສິ້ນລົມຫາຍໃຈ ແລະ ຕາຍ.
[38]ໃນຂະນະນັ້ນຜ້າກັ້ງໃນພຣະວິຫານ ໄດ້ຈີກອອກເປັນສອງຕ່ອນຕັ້ງແຕ່ເທິງຮອດລຸ່ມ.
[39]ເມື່ອນາຍທະຫານ ຜູ້ທີ່ຢືນຢູ່ ແລະ ສ່ອງຫນ້າ ພຣະເຢຊູເຈົ້າ ໄດ້ເຫັນພຣະອົງຕາຍໄປຢ່າງໃດ ລາວຈຶ່ງເວົ້າວ່າ, “ຈິງແທ້ແລ້ວ ທ່ານ
ຜູ້ນີ້ເປັນພຣະບຸດ ຂອງພຣະເຈົ້າ.”[40]ໃນທີ່ນັ້ນມີພວກແມ່ຍິງບາງຄົນທີ່ຄອຍເບິ່ງຢູ່ຫ່າງໆ ໃນພວກເຂົານັ້ນມີ: ມາຣີ ໄທມັກດາລາ, ມາຣີ
(ແມ່ຂອງຢາໂກໂບ ຜູ້ນ້ອງ ແລະ ຂອງໂຢເຊກັບນາງ ຊາໂລເມ).[41]ຍິງເຫລົ່ານີ້ໄດ້ຕິດຕາມ ແລະ ບົວຣະບັດ ພຣະເຢຊູເຈົ້າ
ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລ ແລະ ກໍຍັງມີຍິງຄົນອື່ນອີກຫລາຍຄົນ ທີ່ໄດ້ຂຶ້ນໄປນະຄອນເຢຣູຊາເລັມ ກັບພຣະອົງກໍຢູ່ທີ່ນັ້ນເຫມືອນກັນ.
[42]ເມື່ອເຖິງເວລາຄ່ຳແລ້ວ, ເນື່ອງຈາກວ່າ ວັນນັ້ນເປັນວັນຈັດຕຽມ, ຊຶ່ງວ່າ, ເປັນວັນກ່ອນເຖິງວັນສະບາໂຕ,[43]ໂຢເຊັບ ໄທ
ອາຣິມາທາຍໄດ້ມາທີ່ນັ້ນ. ເພິ່ນເປັນສະມາຊິກສະພາສູງສຸດ ທີ່ມີກຽດຄົນຫນຶ່ງ, ເປັນຜູ້ທີ່ລໍຄອຍ ຖ້າການມາປາກົດ


generated on Tue Jun 17 19:01:42 2025

ແຫ່ງອານາຈັກຂອງພຣະເຈົ້າ. ເພິ່ນກ້າເຂົ້າໄປພົບປີລາດ ເພື່ອຂໍພຣະສົບຂອງພຣະເຢຊູເຈົ້າ.[44]ແຕ່ປີລາດປະຫລາດໃຈຫລາຍ ທີ່ໄດ້ຍິນວ່າ
ພຣະອົງໄດ້ຕາຍແລ້ວ; ສະນັ້ນເພິ່ນຈຶ່ງເອີ້ນນາຍທະຫານເຂົ້າມາຫາ ແລະ ຖາມວ່າພຣະອົງໄດ້ຕາຍດົນນານປານໃດແລ້ວ.
[45]ເມື່ອປີລາດໄດ້ຮູ້ຈາກນາຍທະຫານ ວ່າພຣະເຢຊູເຈົ້າໄດ້ຕາຍແລ້ວ, ເພິ່ນກໍໄດ້ມອບພຣະສົບຂອງພຣະເຢຊູເຈົ້າໃຫ້ແກ່ໂຢເຊັບ.
[46]ໂຢເຊັບໄດ້ຊື້ຜ້າປ່ານແລ້ວ. ລາວໄດ້ເອົາພຣະສົບລົງມາຈາກໄມ້ກາງແຂນ, ໃຊ້ຜ້າປ່ານນັ້ນຫໍ່ພຣະສົບ ແລະ
ນຳໄປວາງໄວ້ໃນອຸໂມງຫີນທີ່ສະກັດແລ້ວ ແລະ ເພິ່ນກໍກິ້ງກ້ອນຫີນໃຫຍ່ ອັດປາກອຸໂມງໄວ້.[47]ສ່ວນມາຣີໄທມັກດາລາ ແລະ ມາຣີແມ່ຂອງໂຢເຊ
ກໍຢູ່ທີ່ນັ້ນ ໄດ້ເຫັນບ່ອນທີ່ໄວ້ພຣະສົບຂອງພຣະເຢຊູເຈົ້າ.

 generated on Tue Jun 17 19:01:42 2025

16 [1]ເມື່ອວັນສະບາໂຕຜ່ານພົ້ນໄປແລ້ວ, ມາຣີ ໄທມັກດາລາ ແລະ ມາຣີແມ່ຂອງຢາໂກໂບ, ແລະ ນາງຊາໂລເມ ກໍຊື້ເຄື່ອງຫອມ ເພື່ອເອົາ
ໄປທາສົບພຣະສົບຂອງພຣະເຢຊູເຈົ້າ.[2]ຕັ້ງແຕ່ຕອນເຊົ້າວັນທຳອິດຂອງອາທິດ, ພໍຕາເວັນຂຶ້ນ ພວກນາງກໍໄປເຖິງອຸໂມງນັ້ນ.

[3]ພວກນາງຖາມກັນວ່າ, "ແມ່ນຜູ້ໃດຈະກິ້ງກ້ອນຫີນນັ້ນອອກຈາກປາກອຸໂມງໃຫ້ພວກເຮົາ?"[4]ພໍເມື່ອ ພວກນາງແນມເບິ່ງກໍ
ເຫັນວ່າຫີນກ້ອນໃຫຍ່ນັ້ນ ຖືກກິ້ງອອກໄປແລ້ວ, ເພາະເປັນຫີນກ້ອນໃຫຍ່ຫລາຍ.
[5]ພວກນາງເຂົ້າໄດ້ໄປໃນອຸໂມງ ແລະ ກໍໄດ້ເຫັນຊາຍໜຸ່ມຜູ້ຫນຶ່ງ ນຸ່ງເສື້ອລ່າມສີຂາວ, ນັ່ງຢູ່ເບື້ອງຂວາ, ແລະ
ພວກນາງກໍມີຄວາມສະທ້ານຢ້ານກົວຕົກໃຈຫລາຍ.[6]ເພິ່ນກ່າວແກ່ພວກນາງວ່າ, "ຢ່າສູ່ຕົກໃຈເລີຍ. ພວກເຈົ້າມາຊອກຫາ ເຢຊູ, ໄທນາຊາເຣັດ,
ຜູ້ ຖືກຄຶງໄວ້ທີ່ໄມ້ກາງແຂນ. ພຣະອົງເປັນຄືນມາແລ້ວ! ພຣະອົງບໍ່ໄດ້ຢູ່ທີ່ນີ້. ເບິ່ງບ່ອນພວກເຂົາໄດ້ວາງພຣະສົບຂອງພຣະອົງໄວ້.[7]ແຕ່ຈົ່ງໄປ,
ບອກພວກສາວົກຂອງພຣະອົງ ແລະ ເປໂຕດ້ວຍວ່າ, 'ພຣະອົງ ຈະໄປທີ່ແຂວງຄາລີເລ ກ່ອນພວກເຈົ້າທັງຫລາຍ.
ໃນທີ່ນັ້ນແຫລະເຈົ້າທັງຫລາຍຈະເຫັນພຣະອົງ, ຕາມທີ່ພຣະອົງໄດ້ບອກພວກເຈົ້າໄວ້ແລ້ວ.'"
[8]ພວກນາງ ຟ້າວແລ່ນອອກໄປຈາກອຸໂມງນັ້ນ; ພວກເຂົາທັງວຸ້ນວາຍສັບສົນ ຕົວສັ່ນເຊັນ ແລະ ຫວາດກົວ. ພວກນາງບໍ່ໄດ້ບອກ
ເລື່ອງນີ້ສູ່ຜູ້ໃດຟັງເພາະຢ້ານຫລາຍ.
[9]ເມື່ອຮຸ່ງເຊົ້າວັນທຳອິດຂອງອາທິດ, ຫລັງຈາກພຣະເຢຊູເຈົ້າ ເປັນຄືນມາຈາກຕາຍແລ້ວ, ພຣະອົງໄດ້ປາກົດແກ່ນາງ ມາຣີ ໄທ
ມັກດາລາເປັນຜູ້ທຳອິດ, ຄືຜູ້ທີ່ພຣະອົງຊົງໄດ້ຂັບໄລ່ ຜີມານຮ້າຍ ເຈັດໂຕອອກນັ້ນ.[10]ນາງຈຶ່ງໄປບອກພວກທີ່ເຄີຍ ຢູ່ກັບພຣະອົງ,
ໃນຂະນະທີ່ພວກເຂົາ ກຳລັງໄວ້ທຸກ ແລະ ຮ້ອງໄຫ້ຢູ່,[11]ພວກເຂົາໄດ້ຍິນວ່າພຣະເຢຊູເຈົ້າຊົງມີຊີວິດຢູ່ ແລະ ທັງໄດ້ຍິນນາງເວົ້າວ່າ
ຕົນໄດ້ເຫັນພຣະອົງດ້ວຍ, ແຕ່ພວກເຂົາກໍບໍ່ໄດ້ເຊື່ອ.
[12]ຫລັງຈາກນັ້ນ, ແລ້ວພຣະເຢຊູເຈົ້າກໍໄດ້ປາກົດໃນລັກສະນະ ຫນຶ່ງທີ່ແຕກຕ່າງ ແກ່ສາວົກສອງຄົນ,
ໃນຂະນະທີ່ພວກເພິ່ນກຳລັງເດີນທາງອອກໄປບ້ານນອກ.[13]ພວກເພິ່ນທັງສອງໄດ້ກັບຄືນ ມາບອກສາວົກຄົນອື່ນໆ, ແຕ່ພວກສາວົກກໍຍັງບໍ່ເຊື່ອ.
[14]ພາຍລຸນມາ ພຣະເຢຊູເຈົ້າກໍໄດ້ປາກົດແກ່ສາວົກສິບເອັດຄົນ ໃນຂະນະທີ່ ພວກເພິ່ນກຳລັງກິນເຂົ້າຢູ່, ແລະ
ພຣະອົງໄດ້ຕຳຫນິຕິຕຽນພວກເຂົາທີ່ເຊື່ອ ແລະ ມີຫົວໃຈທີ່ແຂງກະດ້າງ, ເພາະພວກເຂົາບໍ່ເຊື່ອ
ພວກຄົນທີ່ໄດ້ເຫັນພຣະອົງໄດ້ຄືນພຣະຊົນຈາກຄວາມຕາຍ.[15]ພຣະອົງກໍໄດ້ສັ່ງພວກເພິ່ນວ່າ, "ເຈົ້າທັງຫລາຍຈົ່ງອອກໄປ ທົ່ວໂລກ, ແລະ
ເທສະຫນາຂ່າວປະເສີດ ໃຫ້ແກ່ມະນຸດທີ່ພຣະອົງຊົງສ້າງທັງຫມົດ.[16]ຜູ້ທີ່ເຊື່ອ ແລະ ຮັບບັບຕິສະມາຈະໄດ້ພົ້ນຜູ້ທີ່ບໍ່ ເຊື່ອຈະຖືກໂທດ.
[17]ຫມາຍສຳຄັນເຫລົ່ານີ້ ຈະຕິດຕາມຄົນທີ່ເຊື່ອຄື: ພວກເຂົາຈະຂັບໄລ່ຜີມານຮ້າຍອອກໄດ້ ໃນນາມຂອງເຮົາ. ພວກເຂົາຈະເວົ້າພາສາໃຫມ່ໄດ້,
[18]ພວກເຂົາຈະຈັບງູດ້ວຍມືຂອງພວກເຂົາ, ແລະ ຖ້າພວກເຂົາດື່ມຂອງມີພິດ, ກໍຈະບໍ່ເປັນອັນຕະຣາຍແກ່ພວກເຂົາ. ເມື່ອ
ພວກເຂົາວາງມືໃສ່ຄົນເຈັບປ່ວຍ ແລະ ພວກເຂົານັ້ນກໍຈະຫາຍດີ."
[19]ຫລັງຈາກອົງພຣະຜູ້ເປັນເຈົ້າໄດ້ກ່າວແກ່ພວກເຂົາ, ແລ້ວ ພຣະອົງກໍຖືກຮັບຂຶ້ນສູ່ສະຫວັນ ແລະ ປະທັບນັ່ງທີ່ເບື້ອງຂວາ
ພຣະຫັດຂອງພຣະເຈົ້າ.[20]ພວກສາວົກເຫລົ່ານັ້ນກໍອອກໄປປະກາດ ຂ່າວປະເສີດທົ່ວທຸກທີ່ທຸກບ່ອນ, ໃນຂະນະອົງພຣະຜູ້ປັນເຈົ້າ
ໄດ້ຮ່ວມງານກັບພວກເພິ່ນ ແລະ ໄດ້ຢັ້ງຢືນໃຫ້ເຫັນວ່າການປະກາດຂ່າວປະເສີດຂອງພວກເພິ່ນ ເປັນຄວາມຈິງແທ້ ດ້ວຍຫມາຍສຳຄັນ ແລະ
ການອັດສະຈັນຕ່າງໆທີ່ໄດ້ເກີດຂຶ້ນກັບພວກເພິ່ນ.

# ລູກາ

## 1

[1]ມີຫລາຍຄົນພະຍາຍາມຮຽບຮຽງເລື່ອງເຫດການຕ່າງໆ ທີ່ເກີດຂຶ້ນທ່າມກາງພວກເຮົາ,[2]ເມື່ອພວກເຂົາໄດ້ມອບສິ່ງເຫລົ່ານີ້ໃຫ້ແກ່ເຮົາ,
ຊຶ່ງເປັນຜູ້ທີ່ເປັນພະຍານດ້ວຍຕາ ແລະ ຜູ້ຮັບໃຊ້ສຳຄັນມາຕັ້ງແຕ່ຕົ້ນ.[3]ສຳລັບຕົວຂ້າພະເຈົ້າເອງເຫັນວ່າເປັນການດີ - ທີ່ຈະໄດ້ມີການສືບສວນ
ເຫດການທຸກຢ່າງທີ່ມີມາແຕ່ຕົ້ນຢ່າງຖືກຕ້ອງ - ເພື່ອທີ່ຈະໄດ້ຂຽນເລື່ອງລາວໄດ້ຢ່າງເປັນລະບຽບເພື່ອທ່ານ, ຢ່າງດີທີ່ສຸດໃຫ້ທ່ານເທໂອຟີໂລ.
[4]ເພື່ອວ່າທ່ານຈະໄດ້ຮູ້ຄວາມຈິງກ່ຽວກັບເລື່ອງເຫລົ່ານັ້ນ ສິ່ງທີ່ທ່ານໄດ້ຮັບການສອນ.

[5]ໃນຣາຊະການຂອງເຮໂຣດ, ກະສັດເມືອງຢູດາຍ, ມີປະໂຣຫິດຕົນຫນຶ່ງຊື່ເຊກາຣີຢາ, ຈາກກອງອາບີຢາ. ພັນຣະຍາຂອງເຊກາຣີຢາ
ຈາກລູກສາວຂອງອາໂຣນ, ແລະ ນາງຊື່ເອລີຊາເບັດ.[6]ພວກເຂົາທັງສອງເປັນຄົນຊອບທັມຕໍ່ພຣະພັກພຣະເຈົ້າ, ທັງສອງເຊື່ອຟັງຕາມຄຳສັ່ງ ແລະ
ຂໍ້ບັນຍັດທຸກຂໍ້ຂອງອົງພຣະຜູ້ເປັນເຈົ້າ.[7]ແຕ່ພວກເຂົາບໍ່ມີລູກ, ເພາະເອລີຊາເບັດເປັນຍິງຫມັນ, ແລະ ເຂົາທັງສອງກໍແກ່ຊະ-
ຣາຫລາຍແລ້ວໃນເວລານັ້ນ.
[8]ເມື່ອເຖິງຜຽນທີ່ເຊກາຣີຢາຕ້ອງປະຕິບັດຢູ່ຕໍ່ພຣະພັກຂອງພຣະເຈົ້າ, ເຊິ່ງເປັນການປະຕິບັດຫນ້າທີ່ເປັນປະ-
ໂຣຫິດຕາມຄວາມຮັບຜິດຊອບຂອງເພິ່ນ.[9]ຕາມທຳນຽມຂອງການເລືອກປະໂຣຫິດໃນການປະຕິບັດຮັບໃຊ້,
ທ່ານຖືກເລືອກດ້ວຍການຈົກສະຫລາກ ໃຫ້ເຂົ້າໄປໃນພຣະວິຫານຂອງອົງພຣະຜູ້ເປັນເຈົ້າເພື່ອເຜົາເຄື່ອງຫອມບູຊາ.[10]ສ່ວນພົນລະ-
ເມືອງທັງຫມົດກໍໄຫວ້ວອນຢູ່ຂ້າງນອກໃນເວລາເຜົາເຄື່ອງຫອມນັ້ນ.
[11]ເວລານັ້ນມີເທວະດາຕົນຫນຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ມາປະກົດແກ່ເພິ່ນ ແລະ ຢືນຢູ່ເບື້ອງຂວາມືຂອງແທ່ນເຜົາເຄື່ອງຫອມບູຊານັ້ນ.
[12]ເມື່ອເຊກາຣີຢາໄດ້ເຫັນເພິ່ນ, ກໍຕົກໃຈແລະ ຮູ້ສຶກຢ້ານເທວະດາຕົນນັ້ນ.[13]ແຕ່ເທວະດາຕົນນັ້ນໄດ້ບອກກັບເພິ່ນວ່າ, "ຢ່າຊູ່ຢ້ານ, ເຊກາຣີ-
ຢາເອີຍ, ເພາະພຣະເຈົ້າຟັງຄຳອ້ອນວອນຂອງທ່ານແລ້ວ. ນາງເອລີຊາເບັດ ພັນຣະຍາຂອງທ່ານຈະປະສູດບຸດຊາຍໃຫ້ທ່ານຄົນຫນຶ່ງ,
ແລ້ວທ່ານຈົ່ງໃສ່ຊື່ບຸດນັ້ນວ່າ ໂຢຮັນ.


generated on Tue Jun 17 19:01:42 2025

[14]ທ່ານຈະມີຄວາມຊົມຊື່ນຍິນດີ, ແລະ ມີຄວາມສຸກ ແລະ ມີຄົນຈຳນວນຫລາຍຈະຊື່ນຊົມຍິນດີເພາະການກຳເນີດຂອງເພິ່ນ.[15]ເພາະ-
ວ່າບຸດນັ້ນຈະໄດ້ເປັນໃຫຍ່ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ. ເພິ່ນຈະບໍ່ດື່ມເຫລົ້າແວງ ຫລື ເຫລົ້າປຸກຢ່າງໃດ, ແລະ
ເພິ່ນຈະເຕັມໄປດ້ວຍພຣະວິນຍານບໍຣິສຸດຕັ້ງແຕ່ມາຈາກທ້ອງຂອງມານດາ.
[16]ມີປະຊາຊົນອິສຣາເອນຫລາຍຄົນ ຈະກັບຄືນມາຫາພຣະຜູ້ເປັນເຈົ້າຂອງພວກເຂົາ.[17]ເພິ່ນຈະອອກກ່ອນໜ້າພຣະອົງໂດຍພຣະວິນຍານ ແລະ
ຣິດເດດຂອງເອລີຢາ. ເພິ່ນຈະໃຫ້ບັນດາພໍ່ກັບຄືນດີກັບລູກ ແລະເພື່ອໃຫ້ບັນດາຄົນທີ່ດື້ດ້ານຈະເດີນໃນສະຕິປັນຍາຂອງຄົນຊອບທັມ -
ເພື່ອຈັດຕຽມພົນລະເມືອງໄວ້ພ້ອມສຳລັບອົງພຣະຜູ້ເປັນເຈົ້າ.”
[18]ເຊກາຣີຢາໄດ້ທູນຕໍ່ເທວະດາຕົນນັ້ນວ່າ, “ຂ້ານ້ອຍຈະຮູ້ເຫດການນີ້ໄດ້ຢ່າງໃດ? ເພາະຂ້ານ້ອຍກໍເຖົ້າແລ້ວ ແລະ
ພັນຣະຍາຂອງຂ້ານ້ອຍກໍເຖົ້າແກ່ຫລາຍແລ້ວເຊັ່ນກັນ.”[19]ຝ່າຍເທວະດາຕົນນັ້ນຈຶ່ງຕອບ ແລະ ກ່າວກັບເພິ່ນວ່າ, “ເຮົາແມ່ນຄັບຣິເອນ,
ຊຶ່ງຢືນຢູ່ຕໍ່ພຣະພັກພຣະເຈົ້າ. ເຮົາຖືກໃຊ້ມາເພື່ອບອກທ່ານ, ເຖິງຂ່າວດີນີ້.[20]ເບິ່ງແມ! ທ່ານຈະເປັນຄົນໃບ້, ປາກບໍ່ໄດ້,
ຈົນເຖິງວັນທີ່ເຫດການເຫລົ່ານັ້ນຈະເກີດຂຶ້ນ ເພາະທ່ານບໍ່ໄດ້ເຊື່ອຖ້ອຍຄຳຂອງເຮົາ, ທີ່ຈະສຳເລັດຕາມກຳນົດເວລາທີ່ຖືກຕ້ອງນັ້ນ.”
[21]ປະຊາຊົນກຳລັງລໍຄອຍຖ້າເຊກາຣີຢາ. ພວກເຂົາໄດ້ປະຫລາດໃຈ ເພາະເພິ່ນໄດ້ໃຊ້ເວລາຢູ່ໃນພຣະວິຫານເປັນເວລານານ.
[22]ແຕ່ເມື່ອເຊກາຣີຢາອອກມາ, ເພິ່ນບໍ່ສາມາດເວົ້ານຳພວກເຂົາໄດ້. ພວກເຂົາຈຶ່ງສັງເກດຮູ້ວ່າເພິ່ນໄດ້ເຫັນນິມິດໃນຂະນະທີ່ ເພິ່ນຢູ່ໃນພຣະວິ-
ຫານນັ້ນ. ເພິ່ນໄດ້ສະແດງທ່າທີພາສາໃບ້ຕໍ່ພວກເຂົາ ແລະ ຍັງຄົງມິດງຽບຢູ່.[23]ຈົນເຖິງຫມົດເວລາບົວຣະບັດຂອງເພິ່ນ
ແລ້ວເພິ່ນຈຶ່ງໄດ້ກັບໄປບ້ານຂອງຕົນ.
[24]ຫລັງຈາກວັນນັ້ນ, ເອລີຊາເບັດພັນຣະຍາຂອງເພິ່ນກໍມີທ້ອງ ແລະນາງຈຶ່ງໄປລີ້ຕົວຢູ່ເປັນເວລາຫ້າເດືອນ. ນາງໄດ້ເວົ້າວ່າ,
[25]“ນີ້ເປັນສິ່ງທີ່ພຣະເຈົ້າໄດ້ຊົງເຮັດແກ່ຂ້ານ້ອຍ ເມື່ອຊົງເບິ່ງຂ້ານ້ອຍດ້ວຍຄວາມຊື່ນຊົມ ເພື່ອຊົງຍົກຄວາມອັບອາຍຂອງຂ້ານ້ອຍ
ຕໍ່ຫນ້າຄົນທັງຫລາຍອອກໄປເສຍ.”
[26]ໃນເດືອນທີຫົກ, ພຣະເຈົ້າໄດ້ສົ່ງເທວະດາຄັບຣິເອນຂອງພຣະອົງ ມາຍັງເມືອງຫນຶ່ງໃນແຂວງຄາລີເລຊື່ ນາຊາເຣັດ,[27]ມາຫາຍິງພົມມະຈາ-
ຣີຄົນຫນຶ່ງ ຊຶ່ງເປັນຄູ່ຫມັ້ນຂອງຊາຍຄົນຫນຶ່ງຊື່ໂຢເຊັບ. ຜູ້ທີ່ເປັນເຊື້ອສາຍຂອງກະສັດດາວິດ, ແລະ ຍິງພົມມະຈາຣີນາງນັ້ນຊື່ ມາຣີອາ.
[28]ເມື່ອເທວະດາມາເຖິງນາງ ແລະ ໄດ້ເວົ້າວ່າ, “ສັນຕິສຸກຈົ່ງມີແກ່ເຈົ້າ! ເຈົ້າຜູ້ທີ່ຊົງໂຜດກະຣຸນາຈາກເບື້ອງເທິງ! ຂໍພຣະຜູ້ເປັນເຈົ້າຊົງສະ-
ຖິດຢູ່ກັບເຈົ້າ.”[29]ແຕ່ນາງຕົກໃຈກັບຖ້ອຍຄຳຂອງເທວະດາ ແລະ ນຶກສົງໃສວ່າຄຳທັກທາຍນີ້ຈະຫມາຍຄວາມວ່າຢ່າງໃດ.
[30]ທູດສະຫວັນໄດ້ກ່າວກັບນາງວ່າ, “ຢ່າຊູ່ຢ້ານເລີຍ, ມາຣີອາ, ເພາະວ່າເຈົ້າເປັນທີ່ຊົງພໍພຣະທັຍຈາກອົງພຣະຜູ້ເປັນເຈົ້າແລ້ວ.[31]ເບິ່ງແມ,
ເຈົ້າຈະຖືພາ ແລະ ປະສູດບຸດຊາຍ. ຈົ່ງຕັ້ງຊື່ບຸດນັ້ນວ່າ 'ເຢຊູ'.[32]ບຸດນັ້ນຈະໄດ້ເປັນໃຫຍ່ແລະ ໄດ້ຊົງເອີ້ນວ່າພຣະບຸດຂອງຜູ້ສູງສຸດ. ອົງພຣະຜູ້-
ເປັນເຈົ້າຈະຊົງປະທານພຣະບັນລັງແຫ່ງກະສັດດາວິດ ຜູ້ເປັນບັນພະບຸຣຸດຂອງເພິ່ນ.[33]ພຣະອົງຈະປົກຄອງເຫນືອເຊື້ອສາຍຂອງຢາໂຄບສືບໄປ,
ແລະ ຣາຊະອານາຈັກຂອງພຣະອົງຈະບໍ່ມີທີ່ສິ້ນສຸດ.”
[34]ຝ່າຍມາຣີອາຈຶ່ງທູນຕໍ່ທູດສະຫວັນນັ້ນວ່າ, “ເຫດການນີ້ຈະເກີດເປັນໄປໄດ້ຢ່າງໃດ,
ເພາະຂ້ານ້ອຍຍັງບໍ່ທັນໄດ້ຢູ່ຮ່ວມຫລັບນອນກັບຊາຍໃດເລີຍ?”[35]ທູດສະຫວັນໄດ້ຕອບນາງວ່າ, “ພຣະວິນຍານບໍຣິສຸດຈະສະເດັດລົງມາເທິງເຈົ້າ
ແລະ ຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້. ດັ່ງນັ້ນ ອົງບໍຣິສຸດທີ່ຈະເກີດມາ ຈະຖືກເອີ້ນວ່າເປັນ ພຣະບຸດຂອງພຣະເຈົ້າ.
[36]ເບິ່ງແມ, ນາງເອລີຊາເບັດພີ່ນ້ອງຂອງເຈົ້າກໍຍັງຖືພາບຸດຊາຍເຫມືອນກັນ ໃນເວລາທີ່ລາວມີອາຍຸແກ່ຊະຣາແລ້ວ. ນີ້ແມ່ນເດືອນທີຫົກແລ້ວ,
ຊຶ່ງນາງເຄີຍຖືກເອີ້ນວ່າເປັນຍິງຫມັນ.[37]ເພາະວ່າບໍ່ມີສິ່ງໃດທີ່ເປັນໄປບໍ່ໄດ້ສຳລັບພຣະເຈົ້າ.”[38]ມາຣີອາກ່າວວ່າ,
“ຂ້ານ້ອຍເປັນຂ້ອຍຍິງຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າ. ຂໍໃຫ້ສິ່ງເຫລົ່ານີ້ບັງເກີດແກ່ຂ້ານ້ອຍຕາມຄຳຂອງທ່ານເທີ້ນ!” ແລ້ວທູ
ດສະຫວັນຕົນນັ້ນກໍໄດ້ຈາກນາງໄປ.
[39]ຈາກນັ້ນມາຣີອາໄດ້ລຸກຂຶ້ນ ແລ້ວຮີບໄປຍັງເຂດພູເຂົາໂດຍໄວ, ເຖິງເມືອງຫນຶ່ງໃນແຂວງຢູດາຍ.[40]ນາງໄດ້ເຂົ້າໄປໃນເຮືອນຂອງເຊກາຣີຢາ
ແລະ ໄດ້ກ່າວຄຳທັກທາຍນາງເອລີຊາເບັດ.
[41]ຕອນນີ້ທີ່ນາງ ເອລີຊາເບັດໄດ້ຍິນຄຳທັກທາຍຂອງນາງມາຣີອາ, ບຸດໃນທ້ອງຂອງຕົນກໍດີ້ນ, ແລະ ເອລີຊາເບັດກໍເຕັມໄປດ້ວຍພຣະວິນຍານບໍລິ-
ສຸດ.
[42]ນາງຈຶ່ງຮ້ອງຂຶ້ນດ້ວຍສຽງອັນດັງວ່າ, “ພຣະພອນເປັນຂອງທ່ານໃນທ່າມກາງບັນດາພວກຜູ້ຍິງທັງປວງ, ແລະ
ພຣະພອນກໍແມ່ນລູກໃນທ້ອງທ່ານ.[43]ເຫດສັນໃດຂ້ານ້ອຍຈຶ່ງໄດ້ຮັບຄວາມເມດຕາຢ່າງນີ້ ຄືມານດາຂອງອົງພຣະຜູ້ເປັນ-
ເຈົ້າຂອງຂ້ານ້ອຍໄດ້ມາຫາຂ້ານ້ອຍ?[44]ເບິ່ງແມ, ພໍສຽງທັກທາຍຂອງນາງເຂົ້າຫູຂ້ານ້ອຍ, ລູກໃນທ້ອງຂອງຂ້ານ້ອຍໄດ້ດີ້ນດ້ວຍຄວາມຍິນດີ.
[45]ພຣະພອນແມ່ນເປັນຂອງຜູ້ທີ່ເຊື່ອວ່າສິ່ງເຫລົ່ານີ້ ຈະສຳເລັດຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ບອກກັບນາງ.”
[46]ມາຣີອາກໍໄດ້ກ່າວວ່າ, "ຈິດໃຈຂອງຂ້ານ້ອຍສັນຣະເສີນຍ້ອງຍໍອົງພຣະຜູ້ເປັນເຈົ້າ,[47]ແລະ ຈິດວິນຍານຂອງຂ້ານ້ອຍກໍເກີດຄວາມຊື່ນຊົມຍິນດີ
ໃນພຣະເຈົ້າ ພຣະຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ."
[48]ເພາະພຣະອົງຊົງທອດພຣະເນດ ຖານະອັນຕ່ຳຕ້ອຍຂອງຍິງຜູ້ຮັບໃຊ້ຂອງພຣະອົງ. ເບິ່ງແມ,
ຈາກນີ້ເປັນຕົ້ນໄປຄົນທຸກສະໄຫມຈະເອີ້ນຂ້ານ້ອຍວ່າຜູ້ໄດ້ຮັບພຣະພອນ.[49]ເພາະວ່າຜູ້ຊົງຣິດໄດ້ຊົງກະທຳການອັນຍິ່ງໃຫຍ່ແກ່ຂ້າພຣະເຈົ້າ,
ແລະພຣະນາມຂອງພຣະອົງກໍບໍຣິສຸດສັກສິດ.
[50]ພຣະເມດຕາຂອງພຣະອົງເຈົ້າຫລັ່ງໄຫລສູ່ຄົນແຕ່ລະຍຸກສະໄຫມ ບັນດາຜູ້ທີ່ຢຳເກງພຣະອົງ.
[51]ພຣະອົງສະແດງພຣະກຳລັງຂອງພຣະອົງດ້ວຍແຂນຂອງພຣະອົງ; ພຣະອົງຊົງກະທຳໃຫ້ຄົນທີ່ມີຄວາມຄິດ ຈິດໃຈຈອງຫອງ
ໃຫ້ກະຈັດກະຈາຍໄປ.
[52]ພຣະອົງຊົງປົດເຈົ້າຊາຍທັງຫລາຍລົງຈາກພຣະບັນລັງຂອງພວກເຂົາ ແລະ ພຣະອົງໄດ້ຊົງຍົກຊູຜູ້ຕ່ຳຕ້ອຍຂຶ້ນ.
[53]ພຣະອົງຊົງເຕີມສິ່ງດີທັງຫລາຍໃຫ້ແກ່ຜູ້ທີ່ອຶດຫິວ, ແຕ່ຄົນຮັ່ງມີ ພຣະອົງປຣະທານຄວາມວ່າງເປົ່າໃຫ້.
[54]ພຣະອົງຊົງປຣະທານຄວາມຊ່ອຍເຫລືອແກ່ຊາວອິສຣາເອນຜູ້ຮັບໃຊ້ຂອງພຣະອົງ,
ເພື່ອຊົງຈື່ຈຳທີ່ຈະສະແດງພຣະເມດຕາ[55](ຕາມທີ່ພຣະອົງໄດ້ຊົງບອກໄວ້ກັບບັນພະບຸຣຸດທັງຫລາຍຂອງພວກເຮົາ) ຕໍ່ອັບຣາຮາມ ແລະ
ຕໍ່ເຊື້ອສາຍຂອງເພິ່ນຕະຫລອດໄປເປັນນິດ.

56ນາງມາຣີອາໄດ້ອາໄສຢູ່ກັບນາງອາລີຊາເບັດປະມານສາມເດືອນ ແລະ ຫລັງຈາກນັ້ນນາງກໍໄດ້ກັບຄືນໄປເຮືອນຂອງຕົນ.
57ເມື່ອເຖິງເວລາທີ່ນາງເອລີຊາເບັດຈະໃຫ້ກຳເນີດລູກ ແລະນາງກໍໄດ້ປະສູດລູກຊາຍ. 58ເພື່ອນບ້ານຂອງນາງ ແລະ ພວກຍາດພີ່ນ້ອງ
ໄດ້ຍິນຂ່າວວ່າ ພຣະເຈົ້າໄດ້ຊົງສະແດງພຣະເມດຕາອັນຍິ່ງໃຫຍ່ແກ່ນາງ, ແລະ ພວກເຂົາກໍພາກັນຊົມຊື່ນຍິນດີຮ່ວມກັນກັບນາງ.
59ເມື່ອຄົບເຖິງວັນທີແປດ ພວກເຂົາກໍພາກັນມາໃຫ້ເດັກນ້ອຍນັ້ນຮັບພິທີຕັດ. ພວກເຂົາຈະໃສ່ຊື່ເດັກນ້ອຍວ່າ"ເຊກາຣີຢາ," ຕາມຊື່ຂອງບິດາ.
60ແຕ່ແມ່ຂອງເພິ່ນໄດ້ຕອບ ແລະ ໄດ້ກ່າວແກ່ພວກເຂົາວ່າ, “ບໍ່ແມ່ນ. ເພິ່ນຈະຖືກເອີ້ນວ່າ ໂຢຮັນ.”61ພວກເຂົາໄດ້ກ່າວແກ່ນາງວ່າ, “ໃນພວກພີ່-
ນ້ອງຂອງເຈົ້າບໍ່ມີໃຜທີ່ມີຊື່ຢ່າງນັ້ນ.”
62ພວກເຂົາຈຶ່ງສະແດງທ່າທີພາສາໃບ້ ແກ່ບິດາຂອງເດັກວ່າ ຢາກໃສ່ຊື່ເດັກນ້ອຍນັ້ນວ່າຢ່າງໃດ. 63ບິດາຂອງເພິ່ນຂໍກະດານ ແລະ ຂຽນລົງໄປວ່າ
“ຊື່ຂອງລາວແມ່ນ ໂຢຮັນ” ແລະ ພວກເຂົາກໍປະຫລາດໃຈໃນເລື່ອງນີ້.
64ທັນໃດນັ້ນ ປາກຂອງເຊກາຣີຢາກໍເປີດອອກ ແລະ ລີ້ນຂອງລາວກໍອ່ອນ. ເພິ່ນໄດ້ເວົ້າ ແລະ ໄດ້ກ່າວສັນຣະເສີນພຣະເຈົ້າ.
65ທຸກຄົນຢູ່ອ້ອມຮອບເພິ່ນເກີດຄວາມຢ້ານກົວ ເລື່ອງທີ່ເກີດຂຶ້ນທັງຫມົດນີ້ກໍຖືກຊ່າລືໄປທົ່ວເນີນພູເຂດແດນຂອງຢູດາຍ.
66ແລະທຸກຄົນທີ່ໄດ້ຍິນກໍເກັບເລື່ອງນີ້ໄວ້ໃນໃຈ, ຕ່າງໄດ້ເວົ້າວ່າ, “ເດັກນັ້ນຈະເຕີບໂຕເປັນຢ່າງໃດຕໍ່ໄປ?” ເພາະພຣະຫັດຂອງອົງພຣະຜູ້ເປັນ-
ເຈົ້າກໍສະຖິດຢູ່ກັບເຂົາ.
67ເຊກາຣີຢາບິດາຂອງເດັກ ກໍເຕັມໄປດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ ໄດ້ຮັບຄຳທຳນວາຍ, ໄດ້ກ່າວວ່າ, 68“ສັນຣະເສີນຜູ້ຊົງເປັນພຣະເຈົ້າ,
ພຣະເຈົ້າຂອງອິສຣາເອນ, ເພາະພຣະອົງມາເພື່ອຊ່ວຍ ແລະ ຊົງໄຖ່ເອົາພົນລະເມືອງຂອງພຣະອົງໄດ້ສຳເລັດ.
69ພຣະອົງຊົງຍົກແກແຫ່ງຄວາມລອດພົ້ນ ສຳລັບພວກເຮົາ ໃນເຮືອນຂອງດາວິດ, ຜູ້ຮັບໃຊ້ຂອງພຣະອົງ,
70ຕາມທີ່ພຣະອົງໄດ້ຊົງກ່າວໄວ້ໂດຍປາກ ຂອງຜູ້ປະກາດພຣະທັມທີ່ສັກສິດ ຜູ້ຊຶ່ງຢູ່ໃນສະໄຫມບູຮານ.
71ພຣະອົງຈະນຳຄວາມພົ້ນຈາກສັດຕຣູທັງຫລາຍຂອງພວກເຮົາ ແລະ ຈາກມືຄົນທັງປວງທີ່ກຽດຊັງເຮົາ.
72ພຣະອົງຈະເຮັດສິ່ງນີ້ ເພື່ອສະແດງພຣະເມດຕາ ແກ່ບິດາຂອງພວກເຮົາທັງຫລາຍ ແລະເພື່ອຣະນຶກເຖິງພຣະສັນຍາອັນບໍຣິສຸດຂອງພຣະອົງ.
73ຊຶ່ງເປັນຄຳສາບານທີ່ຊົງກ່າວໄວ້ແກ່ອັບຣາຮາມບິດາຂອງພວກເຮົາ. 74ພຣະອົງຊົງສັນຍາກັບພວກເຮົາວ່າ,
ພວກເຮົາຈະໄດ້ຮັບການປົດປ່ອຍຈາກມືຂອງສັດຕຣູ ແລະ ພວກເຮົາຈະໄດ້ບົວຣະບັດພຣະອົງໂດຍປາສະຈາກຄວາມຢ້ານ, 75ດ້ວຍຄວາມບໍຣິສຸດ
ແລະຄວາມຊອບທັມຕໍ່ພຣະພັກພຣະອົງຕະຫລອດຊີວິດຂອງພວກເຮົາ.
76ແມ່ນແລ້ວ, ແລະ ທ່ານທີ່ເປັນລູກເອີຍ, ຈະເອີ້ນເຈົ້າວ່າ ຜູ້ປະກາດພຣະທັມຂອງພຣະເຈົ້າອົງຜູ້ສູງສຸດ, ເພາະວ່າເຈົ້າຈະໄປກ່ອນຫນ້າອົງພຣະຜູ້-
ເປັນເຈົ້າ, ເພື່ອຕຽມຫົນທາງຂອງພຣະອົງເພື່ອຕຽມໄພ່ພົນສຳລັບການສະເດັດມາຂອງພຣະອົງ, 77ໂດຍການຊົງໂຜດຍົກບາບກັມຂອງພວກເຂົາ.
78ນີ້ຈະເກີດຂຶ້ນດ້ວຍໃຈມີພຣະເມດຕາກາຣຸນາຂອງພຣະເຈົ້າຂອງພວກເຮົາ,
ເນື່ອງດ້ວຍແສງສະຫວ່າງໃນຍາມຮຸ່ງເຊົ້າຈາກທີ່ສູງຈະມາຊ່ວຍພວກເຮົາ. 79ເພື່ອສ່ອງສະຫວ່າງໃຫ້ຜູ້ທີ່ຢູ່ໃນຄວາມມືດ ແລະ
ໃນເງົາແຫ່ງຄວາມຕາຍ. ພຣະອົງຈະກະທຳສິ່ງນີ້ ເພື່ອນຳພາຕີນຂອງເຮົາໄປໃນທາງແຫ່ງສັນຕິສຸກ.”
80ບັດນີ້ ລູກນ້ອຍນັ້ນກໍໃຫຍ່ຂຶ້ນ ແລະ ໄດ້ກາຍເປັນຜູ້ເຂັ້ມແຂງໃນຝ່າຍຈິດວິນຍານ, ແລະເພິ່ນໄດ້ອາໄສຢູ່ໃນປ່າຈົນເຖິງວັນທີ່ຈະໄດ້ມາປະ-
ກົດແກ່ພວກອິສຣາເອນ.

 generated on Tue Jun 17 19:01:42 2025

2 1ໃນຄາວນັ້ນ, ເປັນເວລາທີ່ ກາຍຊາ ໂອຄຸດໂຕໄດ້ສົ່ງຄຳສັ່ງໃຫ້ຈົດທະບຽນສຳມະ-
ໂນຄົວຂອງທຸກຄົນທີ່ດຳຣົງຊີວິດຢູ່ໃນໂລກທົ່ວຣາຊະອານາຈັກ. 2ນີ້ເປັນການຈົດທະບຽນສຳມະໂນຄົວເທື່ອທຳອິດ ໃນສະໄໝທີ່ ກີເຣນີໂອ
ເປັນຜູ້ປົກຄອງແຂວງຊີເຣຍ. 3ດັ່ງນັ້ນ ທຸກຄົນຕ້ອງໄປຍັງບ້ານເກີດເມືອງນອນຂອງຕົນ ເພື່ອທີ່ຈະຂຶ້ນທະບຽນສຳມະໂນຄົວ.

4ໂຢເຊັບເຊັ່ນດຽວກັນກັບກໍຂຶ້ນໄປຈາກເມືອງນາຊາເຣັດ, ແຂວງຄາລີເລ ໄປຍັງເມືອງຂອງດາວິດ, ແຂວງຢູດາຍ ຊຶ່ງຊື່ວ່າເບັດເລເຮັມ,
ເພາະເພິ່ນເປັນເຊື້ອສາຍວົງສະກຸນດຽວກັບດາວິດ. 5ເພິ່ນໄດ້ໄປທີ່ນັ້ນພ້ອມຂຶ້ນທະບຽນກັບ ມາຣີອາ ຍິງທີ່ເພິ່ນໝັ້ນໝາຍໄວ້ແລ້ວ ແລະ
ສ່ວນນາງກໍກຳລັງຖືພາຢູ່.
6ຂະນະທີ່ພວກເຂົາທັງສອງຍັງຢູ່ທີ່ນັ້ນ, ກໍເຖິງເວລາທີ່ມາຣີອາຈະປະສູດບຸດ. 7ນາງຈຶ່ງໄດ້ປະສູດບຸດຊາຍຄົນໜຶ່ງ, ເປັນບຸດຜູ້ກົກຂອງນາງ. ແລະ
ນາງໄດ້ຕູ້ມພັນພຣະອົງໄວ້ດວ້ຍຜ້າອ້ອມ ແລະວາງພຣະອົງໄວ້ໃນຮາງຫຍ້າ, ເພາະບໍ່ມີບ່ອນຫວ່າງສຳລັບພວກເຂົາໃນໂຮງແຮມ.
8ມີພວກລ້ຽງແກະໃນແຖບນັ້ນ ກຳລັງລ້ຽງຝູງແກະຂອງເຂົາຢູ່ທົ່ງຫຍ້າ, ໃນເວລາກາງຄືນ. 9ທູດສະຫວັນຕົນໜຶ່ງຂອງອົງພຣະຜູ້ເປັນ-
ເຈົ້າໄດ້ມາປະກົດແກ່ເຂົາ, ຣັດສະໝີຂອງອົງພຣະຜູ້ເປັນເຈົ້າໄດ້ສ່ອງຮອບພວກເຂົາ, ແລະ ພວກເຂົາກໍເຕັມໄປດ້ວຍຄວາມສະທ້ານໃຈຫລາຍ.
10ແລ້ວທູດສະຫວັນຕົນນັ້ນຈຶ່ງໄດ້ກ່າວແກ່ພວກເຂົາວ່າ, “ຢ່າຊູ່ຢ້ານເລີຍ, ເພາະເຮົານຳເອົາຂ່າວດີມາໃຫ້ພວກເຈົ້າຮູ້
ຊຶ່ງເປັນທີ່ຈະນຳຄວາມຊື່ນຊົມຍິນດີອັນໃຫຍ່ຫລວງມາສູ່ພົນລະເມືອງທັງໝົດ. 11ມື້ນີ້ພຣະຜູ້ຊຶ່ງໂຜດໃຫ້ພົ້ນອົງໜຶ່ງມາບັງເກີດສຳລັບເຈົ້າທັງ-
ຫລາຍໃນຄອບຄົວຂອງດາວິດ! ພຣະອົງຊຶ່ງເປັນພຣະຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າ! 12ນີ້ຈະເປັນໝາຍສຳຄັນແກ່ເຈົ້າທັງຫລາຍຄື:
ພວກເຈົ້າຈະໄດ້ພົບກຸມມານຕົນໜຶ່ງພັນດ້ວຍຜ້າອ້ອມ ແລະ ນອນຢູ່ໃນຮາງຫຍ້າ.”
13ໃນທັນໃດນັ້ນ ກໍມີກອງທັບຈາກສະຫວັນຈຳນວນຫລວງຫລາຍ ໄດ້ມາສັນຣະເສີນພຣະເຈົ້າຮ່ວມກັບທູດສະຫວັນນັ້ນ ແລະ ໄດ້ກ່າວວ່າ.
14“ພຣະຣັດສະໝີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດ, ແລະ ສັນຕິສຸກຈົ່ງບັງເກີດທີ່ແຜ່ນດິນໂລກ ແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະທັຍ.”
15ເມື່ອທູດສະຫວັນເຫລົ່ານັ້ນໄດ້ໄປຈາກພວກເຂົາຂຶ້ນສູ່ສະຫວັນແລ້ວ, ພວກລ້ຽງແກະໄດ້ເວົ້າຕໍ່ກັນວ່າ, “ໃຫ້ເຮົາໄປທີ່ເມືອງເບັດເລເຮັມເທາະ,
ແລະ ເພື່ອໄປເບິ່ງເຫດການທີ່ເກີດຂຶ້ນ, ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງແຈ້ງແກ່ເຮົານັ້ນ.” 16ພວກເຂົາກໍຮີບໄປແລ້ວພົບມາຣີອາ ກັບ ໂຢເຊັບ ແລະ
ໄດ້ເຫັນພຣະກຸມມານນັ້ນນອນຢູ່ໃນຮາງຫຍ້າ.
17ຫລັງຈາກທີ່ພວກເຂົາໄດ້ເຫັນພຣະອົງ ແລ້ວ, ພວກເຂົາກໍເລົ່າເລື່ອງທີ່ເຂົາໄດ້ຍິນເຖິງກຸມມານນັ້ນ.
18ທຸກຄົນທີ່ໄດ້ຍິນເລື່ອງລາວທີ່ພວກຄົນລ້ຽງແກະເລົ່າໃຫ້ຟັງກໍພາກັນປະຫລາດໃຈ. 19ແຕ່ຝ່າຍມາຣີອາກໍຄຶດຮ່ຳເພິງກຽວກັບທຸກສິ່ງທີ່ນາງໄດ້ຍິນ
ແລະ ເກັບຮັກສາເລື່ອງນັ້ນໄວ້ໃນໃຈ. 20ພວກຄົນລ້ຽງແກະຈຶ່ງກັບໄປ ຍ້ອງຍໍສັນຣະເສີນພຣະເຈົ້າ, ສຳລັບເຫດການທັງປວງທີ່ເຂົາໄດ້ເຫັນ,
ແລະໄດ້ຍິນ ແລະໄດ້ເຫັນ ຕາມທີ່ໄດ້ບອກໄວ້ກັບເຂົານັ້ນ.
21ເມື່ອຄົບແປດວັນແລ້ວ ເຊິ່ງເປັນວັນທີ່ພຣະອົງໄດ້ເຂົ້າພິທີຕັດ, ເຂົາຈຶ່ງໃສ່ຊື່ພຣະອົງນັ້ນວ່າ ເຢຊູ ເຊິ່ງເປັນຊື່ຕາມທີ່ທູດສະຫວັນໄດ້ບອກໄວ້ກ່ອນ
ທີ່ພຣະອົງຈະປະຕິສົນທິໃນທ້ອງ.
22ເມື່ອເຖິງເວລາທີ່ຈະທຳພິທີຊຳຣະຕົວໃຫ້ສະອາດຕາມພຣະບັນຍັດຂອງໂມເຊແລ້ວ, ໂຢເຊັບແລະ
ມາຣີອາໄດ້ນຳພຣະອົງໄປຍັງພຣະວິຫານໃນນະຄອນເຢຣູຊາເລັມ ເພື່ອຖວາຍແດ່ອົງພຣະຜູ້ເປັນເຈົ້າ. 23ຕາມທີ່ຂຽນໄວ້ແລ້ວໃນພຣະບັນ-
ຍັດຂອງອົງພຣະຜູ້ເປັນເຈົ້າວ່າ, “ລູກຊາຍກົກທຸກຄົນທີ່ເກີດຈາກທ້ອງແມ່ ຈະຕ້ອງມອບຖວາຍແດ່ອົງພຣະຜູ້ເປັນເຈົ້າ.” 24ດັ່ງນັ້ນ
ພວກເຂົາຈຶ່ງຖວາຍເຄື່ອງບູຊາຕາມທີ່ຊົງກ່າວໄວ້ແລ້ວໃນພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າ ຄື “ນົກເຂົາຄູ່ໜຶ່ງຫລືນົກກາງແກໜຸ່ມສອງໂຕ.”
25ນີ້ແຫລະ, ມີຊາຍຄົນໜຶ່ງຢູ່ໃນກຸງເຢຣູຊາເລັມຊື່ ຊີເມໂອນ ຊາຍຄົນນີ້ເປັນຄົນສິນທັມແລະຢຳເກງພຣະເຈົ້າ
ເພິ່ນໄດ້ຄອຍຖ້າຜູ້ທີ່ຈະບັນເທົາທຸກຂອງຄົນອິສຣາເອນ ແລະ ພຣະວິນຍານບໍຣິສຸດຊົງສະຖິດຢູ່ກັບເພິ່ນ. 26ພຣະວິນຍານບໍຣິສຸດໄດ້ຊົງສຳ-
ແດງເປີດເຜີຍ ແກ່ເພິ່ນແລ້ວວ່າ, ເພິ່ນຈະບໍ່ຕາຍຈົນກວ່າຈະໄດ້ເຫັນພຣະຄຣິດເຈົ້າຜູ້ມາຈາກອົງພຣະຜູ້ເປັນເຈົ້າ.
27ຊີເມໂອນໄດ້ເຂົ້າໄປໃນບໍຣິເວນພຣະວິຫານໂດຍພຣະວິນຍານບໍຣິສຸດຊົງນຳ. ເມື່ອບິດາມານດາໄດ້ນຳເອົາພຣະກຸມມານເຢຊູເຂົ້າໄປ ເພື່ອ-
ທຳຕາມທຳນຽມປະຕິບັດຂອງພຣະບັນຍັດ. 28ຊີເມໂອນໄດ້ອູ້ມເອົາກຸມມານໄວ້ໃນອ້ອມແຂນ ແລະ ສັນຣະເສີນພຣະເຈົ້າ ແລະ ກ່າວວ່າ.
29“ຂ້າແດ່ພຣະອົງເຈົ້າ ບັດນີ້ພຣະອົງໄດ້ຊົງໃຫ້ຂ້ອຍໃຊ້ຂອງພຣະອົງໄປເປັນສຸກ ຕາມພຣະທັມຂອງພຣະອົງເຖີດ."
30ເພາະວ່າຕາຂ້າພຣະອົງໄດ້ເຫັນຄວາມລອດພົ້ນຂອງພຣະອົງແລ້ວ, 31ຊຶ່ງພຣະອົງໄດ້ຊົງຈັດຕຽມໄວ້ ສຳລັບຄົນໃນຍຸກນີ້.
32ແສງສະຫວ່າງແຫ່ງການເປີດເຜີຍທີ່ມາເຖິງບັນດາປະຊາຊາດ ແລະ ພຣະສະຫງ່າຣາສີທີ່ມີແກ່ພວກອິສຣາເອນ ປະຊາຊົນຂອງພຣະອົງ.”
33ບິດາມານດາຂອງພຣະກຸມມານກໍປະຫລາດໃຈໃນຖ້ອຍຄຳທີ່ຊີເມໂອນໄດ້ກ່າວເຖິງພຣະກຸມມານນັ້ນ. 34ຊີເມໂອນໄດ້ອວຍພອນແກ່ພວກເຂົາ
ແລະ ໄດ້ກ່າວແກ່ມາຣີອາມານດາຂອງພຣະກຸມມານ ວ່າ, “ເບິ່ງແມ, ເດັກນ້ອຍຄົນນີ້ໄດ້ຮັບການແຕ່ງຕັ້ງໄວ້ ແລະ
ເພື່ອເຮັດໃຫ້ຫລາຍຄົນໃນພວກອິສຣາເອນລົ້ມລົງ ແລະ ຍົກຊູຂຶ້ນ ແລະ ເພື່ອເປັນໝາຍສຳຄັນທີ່ຖືກກ່າວປະຕິເສດ. 35ແລະ
ດາບຈະແທງທະລຸຈິດໃຈຂອງທ່ານ ເພື່ອທີ່ຄວາມຄຶດໃນໃຈຂອງຄົນຈຳນວນຫລວງຫລາຍ ຈະຖືກປະກົດແຈ້ງອອກມາ.”
36ຍັງມີໝໍທຳນວາຍຍິງຄົນໜຶ່ງຊື່ ອານາ. ນາງເປັນລູກຂອງຟານູເອັນໃນເຜົ່າອາເຊ. ນາງເປັນຄົນແກ່ຊະຣາຫລາຍແລ້ວ
ນາງຢູ່ກິນນຳສາມີເປັນເວລາເຈັດປີ ຫລັງຈາກທີ່ເປັນສາວປອດ. 37ແລ້ວກໍເປັນໝ້າຍເປັນເວລາແປດສິບສີ່ປີ ນາງບໍ່ເຄີຍອອກຈາກບໍຣິເວນພຣະວິ-
ຫານ ແຕ່ໄດ້ຢູ່ປະຕິບັດພຣະເຈົ້າດ້ວຍການຖືສິນອົດອາຫານ ແລະໄຫວ້ວອນທັງກາງເວັນແລະກາງຄືນ. 38ໃນຂະນະນັ້ນ
ນາງໄດ້ເຂົ້າມາຫາພວກເຂົາແລະໂມທະນາພຣະຄຸນພຣະເຈົ້າ ແລະນາງໄດ້ບອກກ່ຽວກັບພຣະກຸມມານໃຫ້ຄົນທັງປວງທີ່ກຳ-
ລັງຄອຍຖ້າການຊົງໄຖ່ໃຫ້ພົ້ນ ຂອງນະຄອນເຢຣູຊາເລັມ.
39ເມື່ອພວກເພິ່ນໄດ້ເຮັດສຳເລັດທຸກສິ່ງຕາມພຣະບັນຍັດຂອງພຣະຜູ້ເປັນເຈົ້າກຳນົດໃຫ້ເຮັດ ພວກເພິ່ນກໍໄດ້ກັບເມືອຍັງເມືອງນາຊາເຣັດ
ແຂວງຄາລີເລບ້ານເກີດເມືອງນອນຂອງຕົນ. 40ພຣະກຸມມານນັ້ນກໍໃຫຍ່ຂຶ້ນ ແລະ ແຂງແຮງ, ເຕັມໄປດ້ວຍສະຕິປັນຍາ, ແລະ
ພຣະຄຸນຂອງພຣະເຈົ້າກໍສະຖິດຢູ່ເຫນືອພຣະອົງ.
41ຝ່າຍບິດາມານດາຂອງພຣະອົງ ເຄີຍໄດ້ໄປຮ່ວມເທສະການປັດສະຄາ ທີ່ນະຄອນເຢຣູຊາເລັມທຸກປີ. 42ເມື່ອພຣະອົງມີອາຍຸສິບສອງປີ
ພວກເພິ່ນກໍພາພຣະອົງຂຶ້ນໄປຮ່ວມເທສະການປັດສະຄານັ້ນອີກຄັ້ງໜຶ່ງ. 43ຫລັງຈາກທີ່ພວກເພິ່ນຢູ່ຄົບກຳນົດວັນປັດສະຄານັ້ນແລ້ວ
ພວກເພິ່ນກໍເລີ່ມເດີນທາງກັບບ້ານ ແຕ່ພຣະເຢຊູເຈົ້າກໍຍັງຄ້າງຢູ່ທີ່ນະຄອນເຢຣູຊາເລັມ ແຕ່ບິດາມານດາຂອງພຣະອົງບໍ່ຮູ້.


generated on Tue Jun 17 19:01:42 2025

[44]ພວກເພິ່ນທັງສອງຄິດວ່າພຣະອົງຢູ່ນຳກຸ່ມຄົນທີ່ເດີນທາງມາດ້ວຍກັນກັບພວກເພິ່ນ ດັ່ງນັ້ນເມື່ອພວກເພິ່ນເດີນທາງກັບໄປໄດ້ມື້ຫນຶ່ງ.
ຈຶ່ງໄດ້ເລີ່ມຕົ້ນຊອກຫາພຣະອົງໃນຫມູ່ພີ່ນ້ອງ ແລະ ຫມູ່ເພື່ອນ ຂອງພວກເພິ່ນ.
[45]ເມື່ອພວກເພິ່ນບໍ່ພົບພຣະອົງ, ພວກເພິ່ນຈຶ່ງກັບຄືນໄປທີ່ນະຄອນເຢຣູຊາເລັມ ແລະ ຊອກຫາພຣະອົງທີ່ນັ້ນ.[46]ຫລັງຈາກນັ້ນສາມວັນ
ພວກເພິ່ນກໍພົບພຣະອົງນັ່ງຢູ່ໃນບໍຣິເວນພຣະວິຫານ ທ່າມກາງພວກອາຈານ ກຳລັງຟັງແລະຖາມຄຳຖາມພວກອາຈານເຫລົ່ານັ້ນຢູ່.
[47]ຄົນທັງປວງທີ່ໄດ້ຍິນກໍປະຫລາດໃຈໃນສະຕິປັນຍາແລະ ຄຳຕອບຂອງພຣະອົງ.
[48]ເມື່ອພວກເພິ່ນເຫັນພຣະອົງ, ພວກເພິ່ນກໍອັດສະຈັນໃຈ. ມານດາຂອງພຣະອົງຈຶ່ງກ່າວກັບພຣະອົງວ່າ, “ລູກເອີຍ,
ເປັນຫຍັງເຈົ້າຈຶ່ງເຮັດຢ່າງນີ້ແກ່ເຮົາ? ຟັງເດີ, ພໍກັບແມ່ໄດ້ຊອກຫາເຈົ້າດ້ວຍຄວາມທຸກໃຈຫລາຍ.”[49]ຝ່າຍພຣະອົງກໍຕອບພວກເພິ່ນວ່າ,
“ພວກທ່ານຊອກຫາເຮົາເຮັດຫຍັງ? ພວກທ່ານຍັງບໍ່ຮູ້ ຫລື ວ່າ ເຮົາຕ້ອງຢູ່ໃນທີ່ສະຖິດແຫ່ງພຣະບິດາຂອງເຮົາ.”[50]ແຕ່ພວກເຂົາບໍ່ໄດ້ເຂົ້າ-
ໃຈຄຳຕອບເຫລົ່ານັ້ນວ່າພຣະອົງຫມາຍເຖິງຫຍັງ.
[51]ແລ້ວພຣະອົງກໍກັບໄປຍັງເມືອງນາຊາເຣັດພ້ອມກັບພວກເພິ່ນ ແລະ ເຊື່ອຟັງພວກເພິ່ນ.
ສ່ວນມານດາຂອງພຣະອົງກໍເກັບຮັກສາເລື່ອງທັງຫລາຍນີ້ໄວ້ໃນໃຈ.[52]ແຕ່ພຣະເຢຊູເຈົ້າກໍໄດ້ຈະເຣີນຂຶ້ນໃນດ້ານສະຕິປັນຍາ, ແລະ ດ້ານຮ່າງ-
ກາຍ, ແລະ ເປັນທີ່ພໍພຣະທັຍຕໍ່ພຣະເຈົ້າ ແລະຕໍ່ມະນຸດ.

 generated on Tue Jun 17 19:01:42 2025

3 [1]ໃນປີທີສິບຫ້າໃນຣາຊການຂອງຈັກກະພັດຕິເບຣີໂອ - ຂະນະທີ ປົນຕີໂອປີລາດ ເປັນຜູ້ປົກຄອງແຂວງຢູດາຍ, ເຮ-
ໂຣດເປັນຜູ້ປົກຄອງແຂວງຄາລີເລ, ນ້ອງຊາຍຂອງເຮໂຣດຄື ຟີລິບ ເປັນຜູ້ປົກຄອງແຂວງອີຕູຣາຍແລະທຣາໂຄນິດ, ລີຊາ-
ເນຍເປັນຜູ້ປົກຄອງແຂວງອາບີເລັນ.[2]ໃນສະໄຫມຂອງມະຫາປະໂຣຫິດອັນນາ ແລະ ກາຢະຟາມີພຣະທັມຂອງພຣະເຈົ້າໄດ້ມາເຖິງໂຢຮັນບຸດເຊ-
ກາຣີຢາໃນຖິ່ນແຫ້ງແລ້ງກັນດານ.

[3]ໂຢຮັນໄດ້ໄປທົ່ວເຂດອ້ອມແອ້ມແມ່ນ້ຳຈໍແດນ, ປະກາດບັບຕິສະມາ ສະແດງການຖິ້ມໃຈເກົ່າເອົາໃຈໃຫມ່
ເພື່ອຮັບການຍົກໂທດຍົກຄວາມຜິດບາບເສຍ.
[4]ຕາມທີ່ຂຽນໄວ້ແລ້ວໃນຫນັງສືຖ້ອຍຄຳຂອງເອຊາຢາຜູ້ປະກາດພຣະທັມວ່າ,“ມີສຽງຫນຶ່ງຮ້ອງໃນຖິ່ນແຫ້ງແລ້ງກັນດານວ່າ
‘ທ່ານຄວນຈັດແຈງທາງຂອງອົງພຣະຜູ້ເປັນເຈົ້າໃຫ້ພ້ອມ, ທ່ານຄວນເຮັດຫົນທາງຂອງພຣະອົງໃຫ້ຊື່ໄປ.
[5]ຮ່ອມທຸກຮ່ອມຈະໄດ້ຖົມໃຫ້ເຕັມ, ພູເຂົາແລະໂນນພູທຸກຫນ່ວຍຈະເຮັດໃຫ້ຕ່ຳລົງສະເຫມີກັນ,
ທາງຄົດຈະເຮັດໃຫ້ຊື່ແລະທາງມີຕໍກໍຈະເຮັດໃຫ້ກ້ຽງ.[6]ມະນຸດທັງປວງຈະໄດ້ເຫັນການຊົງຊ່ວຍຂອງພຣະເຈົ້າ’.”
[7]ໂຢຮັນຈຶ່ງກ່າວແກ່ປະຊາຊົນກຸ່ມໃຫຍ່ທີ່ອອກມາຮັບບັບຕິສະມາຈາກຕົນວ່າ, “ໂອ ອ້າຍຊາດງູຮ້າຍເອີຍ! ໃຜໄດ້ບອກສູໃຫ້ປົບຫນີຈາກພຣະພິ-
ໂຣດແລະໂທດທີ່ກຳລັງຈະມາເຖິງ?
[8]ເຫດສັນນັ້ນ, ຈົ່ງສະແດງໃຫ້ເຫັນຜົນຂອງການຖິ້ມໃຈເກົ່າເອົາໃຈໃຫມ່, ຢ່າຕັ້ງນຶກໃນໃຈເອົາເອງວ່າ ‘ພວກເຮົາມີອັບຣາຮາມເປັນບິດາ’
ເພາະເຮົາບອກເຈົ້າທັງຫລາຍວ່າພຣະເຈົ້າຊົງຣິດອາດຈະບັນດານໃຫ້ລູກຫລານທັງຫຼາຍເກີດແກ່ອັບຣາຮາມຈາກກ້ອນຫີນເຫລົ່ານີ້ກໍໄດ້.
[9]ບັດນີ້ຂວານກໍວາງໄວ້ທີ່ເຫງົ້າຕົ້ນໄມ້ແລ້ວ ດັ່ງນັ້ນໄມ້ທຸກຕົ້ນທີ່ບໍ່ເກີດຜົນດີ ກໍຈະຖືກປ້ຳແລະໂຍນຖິ້ມລົງໃສ່ໄຟ.”
[10]ດັ່ງນັ້ນປະຊາຊົນຈຶ່ງຖາມໂຢຮັນວ່າ, “ຖ້າດັ່ງນັ້ນພວກເຮົາເຮັດແນວໃດ?”[11]ເພິ່ນໄດ້ຕອບພວກເຂົາວ່າ, “ຫາກຜູ້ໃດທີ່ມີເສື້ອສອງໂຕ
ເຈົ້າຈົ່ງປັນໃຫ້ຜູ້ບໍ່ມີ ແລະຜູ້ທີ່ມີອາຫານກໍຄວນແບ່ງເຊັ່ນດຽວກັນ.”
[12]ພວກຄົນເກັບພາສີກໍໄດ້ມາຮັບບັບຕິສະມາເຫມືອນກັນ ແລະພວກເຂົາຖາມເພິ່ນວ່າ, “ອາຈານເອີຍ, ພວກຂ້ານ້ອຍຄວນຈະເຮັດຢ່າງ-
ໃດ?”[13]ເພິ່ນຕອບເຂົາວ່າ, “ຢ່າໄດ້ເກັບພາສີເກີນອັດຕາທີ່ພວກທ່ານໄດ້ຮັບຄຳສັ່ງໃຫ້ເກັບ.”
[14]ມີທະຫານບາງຄົນກໍຖາມເພິ່ນເຫມືອນກັນວ່າ, “ແລ້ວພວກຂ້ານ້ອຍເດ? ພວກເຮົາຕ້ອງເຮັດແນວໃດ?” ເພິ່ນຈຶ່ງຕອບເຂົາວ່າ, “ຢ່າຂົ່ມ-
ເຫັງເອົາເງິນຈາກຜູ້ໃດ, ຢ່າຫາຄວາມບໍ່ຈິງໃສ່ໃຜ. ຈົ່ງພໍໃຈໃນຄ່າຈ້າງທີ່ພວກທ່ານໄດ້ຮັບ.”
[15]ຂະນະທີ່ປະຊາຊົນກຳລັງຄາດຫວັງຢ່າງແຮງກ້າວ່າພຣະຄຣິດຈະສະເດັດມາ, ທຸກຄົນກໍຄຶດໃນໃຈວ່າໂຢຮັນອາດຈະເປັນພຣະຄຣິດ.[16]ໂຢ-
ຮັນຈຶ່ງໄດ້ຕອບພວກເຂົາວ່າທຸກຄົນວ່າ, “ຝ່າຍເຮົາ, ເຮົາໃຫ້ເຈົ້າທັງຫລາຍຮັບບັບຕິສະມາໃນນ້ຳກໍຈິງ,
ແຕ່ມີທ່ານຜູ້ຫນຶ່ງຈະສະເດັດມາເປັນຜູ້ມີຣິອຳນາດກວ່າເຮົາອີກ, ຊຶ່ງເຮົາບໍ່ສົມຄວນແມ່ນແຕ່ຈະແກ້ສາຍຮັດເກີບຂອງພຣະອົງ,
ພຣະອົງຈະໃຫ້ພວກເຈົ້າຮັບບັບຕິສະມາໃນພຣະວິນຍານບໍຣິສຸດແລະໃນໄຟ.
[17]ດົ້ງຝັດເຂົ້າຂອງພຣະອົງກໍຢູ່ໃນມືພຣະອົງແລ້ວ ເພື່ອຊໍາຣະລານເຂົ້າຂອງພຣະອົງໃຫ້ກ້ຽງດີ ແລະ
ເພື່ອແຍກເຂົ້າເມັດດີໃສ່ໄວ້ໃນເລົ້າຂອງພຣະອົງ ແຕ່ພຣະອົງຈະຊົງເຜົາເຂົ້າລີບດ້ວຍໄຟທີ່ບໍ່ຮູ້ມອດ.”
[18]ໂຢຮັນໃຊ້ການກະຕຸ້ນເຕືອນຫລາຍປະການ ໃນການປະກາດຂ່າວປະເສີດແກ່ປະຊາຊົນ.[19]ເມື່ອເຮໂຣດຜູ້ປົກຄອງເມືອງ, ເມື່ອຖືກໂຢຮັນກ່າວຕິ-
ຕຽນເພາະເລື່ອງນາງ ເຮໂຣເດຍ ພັນຣະຍານ້ອງຊາຍຂອງຕົນ ແລະ ເພາະການຊົ່ວທັງຫລາຍທີ່ເຮໂຣດໄດ້ເຮັດນັ້ນ.[20]ເຮ-
ໂຣດຍັງເຮັດການຊົ່ວນີ້ເພີ່ມກັບການທີ່ຕົນໄດ້ເຮັດມາແລ້ວ ຄືໄດ້ຈັບໂຢຮັນຂັງໄວ້ໃນຄຸກ.
[21]ຢູ່ມາເມື່ອຄົນທັງປວງໄດ້ຮັບບັບຕິສະມາ, ພຣະເຢຊູເຈົ້າກໍຊົງຮັບບັບຕິສະມາເຫມືອນກັນ, ແລະ ຂະນະທີ່ພຣະອົງກຳລັງອະທິຖານຢູ່ ທ້ອງ-
ຟ້າກໍໄຂອອກ.[22]ແລະ ພຣະວິນຍານບໍຣິສຸດ ຊົງຮູບເຫມືອນນົກເຂົາໄດ້ສະເດັດລົງມາສະຖິດຢູ່ເທິງພຣະອົງ ແລະມີພຣະສຸ-
ຣະສຽງອອກມາຈາກຟ້າສະຫວັນວ່າ, “ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ ໆຊອບໃຈຫລາຍໃນທ່ານ.”
[23]ພຣະເຢຊູເຈົ້າຊົງຕັ້ງຕົ້ນປະຕິບັດພາຣະກິດຂອງພຣະອົງ ເມື່ອພຣະອົງມີອາຍຸປະມານສາມສິບປີ (ຕາມຄວາມ ເຂົ້າໃຈຂອງຄົນທັງຫລາຍ
ພວກເຂົາຄຶດວ່າ) ພຣະອົງເປັນບຸດຂອງໂຢເຊັບ, ໂຢເຊັບເປັນບຸດຂອງເຮລີ.[24]ເຮລີເປັນບຸດຂອງມັດທາດ, ມັດທາດເປັນບຸດຂອງເລວີ, ເລ-
ວີເປັນບຸດຂອງເມລະຂີ, ເມລະຂີເປັນບຸດຂອງຢັນນາ, ຢັນນາເປັນບຸດຂອງໂຢເຊັບ.
[25]ໂຢເຊັບເປັນບຸດຂອງມັດຕາເທຍ, ມັດຕາເທຍເປັນບຸດຂອງອາໂມ, ອາໂມເປັນບຸດຂອງນາຮູມ, ນາຮູມເປັນບຸດຂອງເອຊະລີ, ເອຊະ-
ລີເປັນບຸດຂອງນາຄາຍ.[26]ນາຄາຍເປັນບຸດຂອງມາອາດ, ມາອາດເປັນບຸດຂອງມັດຕາເທຍ, ມັດຕາເທຍເປັນບຸດຂອງເຊເມອີນ, ເຊເມ-
ອີນເປັນບຸດຂອງໂຢເຊັກ, ໂຢເຊັກເປັນບຸດຂອງໂຢດາ.
[27]ໂຢດາເປັນບຸດຂອງໂຢຮານັນ, ໂຢຮານັນເປັນບຸດຂອງເຣສາ, ເຣສາເປັນບຸດຂອງເຊຣຸບບາເບນ, ເຊຣຸບບາເບນເປັນບຸດຂອງເຊອານຕີເອນ, ເຊ-
ອານຕີເອນເປັນບຸດຂອງເນຣີ.[28]ເນຣີເປັນບຸດຂອງເມລະຂີ, ເມລະຂີເປັນບຸດຂອງອັດດີ, ອັດດີເປັນບຸດຂອງໂກຊາມ, ໂກຊາມເປັນບຸດຂອງເອັນມາ-
ດາມ, ເອັນມາດາມເປັນບຸດຂອງເອຣະ.[29]ເອຣະເປັນບຸດຂອງໂຢຊວຍ, ໂຢຊວຍເປັນບຸດຂອງເອລີເອເຊ, ເອລີເອເຊເປັນບຸດຂອງໂຢຣິມ, ໂຢ-
ຣິມເປັນບຸດຂອງມັດທາດ, ມັດທາດເປັນບຸດຂອງເລວີ.
[30]ເລວີເປັນບຸດຂອງຊີມີໂອນ, ຊີມີໂອນເປັນບຸດຂອງຢູດາ, ຢູດາເປັນບຸດຂອງໂຢເຊັບ, ໂຢເຊັບເປັນບຸດຂອງໂຢນາມ, ໂຢນາມເປັນບຸດຂອງເອລີຢາ-
ກີມ.[31]ເອລີຢາກີມເປັນບຸດຂອງເມເລອາ, ເມເລອາເປັນບຸດຂອງເມັນນາ, ເມັນນາເປັນບຸດຂອງມັດຕາທາ, ມັດຕາທາເປັນບຸດຂອງນາທານ, ນາ-
ທານເປັນບຸດຂອງດາວິດ.[32]ດາວິດເປັນບຸດຂອງເຢຊີ, ເຢຊີເປັນບຸດຂອງໂອເບັດ, ໂອເບັດເປັນບຸດຂອງໂບອາດ, ໂບອາດເປັນບຸດຂອງສານໂມນ,
ສານໂມນເປັນບຸດຂອງນາໂຊນ.
[33]ນາໂຊນເປັນບຸດຂອງອຳມີນາດາບ, ອຳມີນາດາບເປັນບຸດຂອງອັດມິນ, ອັດມິນເປັນບຸດຂອງອານີ, ອານີເປັນບຸດຂອງເຮຊະໂຣນ, ເຮຊະ-
ໂຣນເປັນບຸດຂອງເປເຣັດ, ເປເຣັດເປັນບຸດຂອງຢູດາ.[34]ຢູດາເປັນບຸດຂອງຢາໂຄບ, ຢາໂຄບເປັນບຸດຂອງອີຊາກ, ອີຊາກເປັນບຸດຂອງອັບຣາຮາມ,
ອັບຣາຮາມເປັນບຸດຂອງເຕຣາ, ເຕຣາເປັນບຸດຂອງນາໂຮ.[35]ນາໂຮເປັນບຸດຂອງເສຣຸກ, ເສຣຸກເປັນບຸດຂອງເຣອູ, ເຣອູເປັນບຸດຂອງເປເລັກ,
ເປເລັກເປັນບຸດຂອງເອເບ, ເອເບເປັນບຸດຂອງເຊລາ.


generated on Tue Jun 17 19:01:42 2025

[36]ເຊລາເປັນບຸດຂອງກາຍນານ, ກາຍນານເປັນບຸດຂອງອາກປັກຊາດ, ອາກປັກຊາດເປັນບຸດຂອງເຊມ, ເຊມເປັນບຸດຂອງໂນອາ, ໂນ-
ອາເປັນບຸດຂອງລາເມັກ.[37]ລາເມັກເປັນບຸດຂອງເມທູເຊລາ, ເມທູເຊລາເປັນບຸດຂອງເອໂນກ, ເອໂນກເປັນບຸດຂອງຢາເຣັດ, ຢາ-
ເຣັດເປັນບຸດຂອງມະຫາລາເລນ, ມະຫາລາເລນເປັນບຸດຂອງເກນານ.[38]ເກນານເປັນບຸດຂອງເອໂນດ, ເອໂນດເປັນບຸດຂອງເຊດ,
ເຊດເປັນບຸດຂອງອາດາມ, ອາດາມເປັນບຸດພຣະເຈົ້າ.


generated on Tue Jun 17 19:01:42 2025

4 [1]ຈາກນັ້ນ ພຣະເຢຊູຊົງເຈົ້າເຕັມໄປດ້ວຍພຣະວິນຍານບໍຣິສຸດ ໄດ້ສະເດັດກັບຈາກແມ່ນ້ຳຈໍແດນ ແລະພຣະວິນ-
ຍານບໍຣິສຸດເຈົ້າໄດ້ຊົງນຳພຣະອົງໄປໃນຖິ່ນແຫ້ງແລ້ງກັນດານ.[2]ທີ່ຊຶ່ງພຣະອົງຖືກມານຮ້າຍທົດລອງເປັນເວລາສີ່ສິບວັນ. ໃນວັນເວລາ-
ນັ້ນພຣະອົງບໍ່ໄດ້ຮັບປະທານສິ່ງໃດ ເມື່ອເວລາແຫ່ງການທົດລອງສິ້ນສຸດ ພຣະອົງຊົງຢາກອາຫານ.

[3]ມານຮ້າຍໄດ້ທູນພຣະອົງວ່າ, "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງສັ່ງຫີນກ້ອນນີ້ໃຫ້ກາຍເປັນເຂົ້າຈີ່."[4]ພຣະເຢຊູເຈົ້າຊົງຕອບມັນວ່າ,
"ມີພຣະຄັມພີຂຽນໄວ້ວ່າ 'ມະນຸດຈະບໍ່ລ້ຽງຊີວິດພຽງອາຫານສິ່ງດຽວກໍບໍ່ໄດ້'."
[5]ຈາກນັ້ນມານຮ້າຍໄດ້ນຳພຣະເຢຊູເຈົ້າຂຶ້ນເມື່ອທີ່ສູງ ແລະສະແດງບັນດາຣາຊະອານາຈັກຕ່າງໆຂອງໂລກໃຫ້ພຣະອົງເຫັນໃນຊົ່ວຂະນະຫນຶ່ງ.
[6]ມານໄດ້ທູນພຣະອົງວ່າ, "ເຮົາຈະມອບຣິດອຳນາດທຸກຢ່າງແກ່ທ່ານ ລວມທັງສະຫງ່າຣາສີ
ເພາະວ່າອານາຈັກເຫລົ່ານີ້ໄດ້ຖືກມອບສິດໄວ້ແກ່ເຮົາປົກຄອງແລ້ວ ແລະເຮົາສາມາດມອບໃຫ້ແກ່ຜູ້ໃດກໍໄດ້.[7]ດັ່ງນັ້ນ
ຫາກທ່ານກົ້ມຂາບລົງໄຫວ້ເຮົາ ແລະນະມັດສະການເຮົາ ສັບພະສິ່ງນັ້ນຈະເປັນຂອງທ່ານ."
[8]ແຕ່ພຣະເຢຊູເຈົ້າຊົງຕອບມານວ່າ, "ດັ່ງທີ່ມີຄຳຂຽນໄວ້ວ່າ, 'ທ່ານຈົ່ງຂາບໄຫວ້ອົງພຣະຜູ້ເປັນເຈົ້າຂອງເຈົ້າແລະຮັບໃຊ້ພຣະອົງແຕ່ຜູ້ດຽວ'."
[9]ຈາກນັ້ນມານຮ້າຍໄດ້ນຳພຣະອົງໄປຍັງນະຄອນເຢຣູຊາເລັມ ແລະນຳພຣະອົງຂຶ້ນໄປຢູ່ເທິງຫລັງຄາພຣະວິຫານ ແລະທູນພຣະອົງວ່າ,
"ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງໂຕນລົງຈາກທີ່ນີ້.[10]ເພາະວ່າມີຄຳຂຽນໄວ້ວ່າ, 'ພຣະເຈົ້າຈະສັ່ງພວກທູດສະຫວັນຂອງພຣະ-
ອົງດູແລແລະປົກປ້ອງທ່ານ'.[11]ແລະ, 'ທູດສະຫວັນເຫລົ່ານັ້ນຈະເອົາມືຮັບທ່ານໄວ້ບໍ່ໃຫ້ຕີນຂອງທ່ານຈະຕຳຫີນ'."
[12]ພຣະເຢຊູເຈົ້າຊົງຕອບມານວ່າ, "ມີຄຳກ່າວໄວ້ວ່າ, 'ຢ່າໄດ້ທົດລອງອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ'."[13]ເມື່ອມານໄດ້ທົດລອງພຣະ-
ອົງທຸກປະການແລ້ວ ມັນກໍຫນີຈາກໄປແລະປະພຣະອົງໄວ້ຈົນກວ່າຈະມີໂອກາດອີກ.
[14]ຈາກນັ້ນ ພຣະເຢຊູເຈົ້າໄດ້ສະເດັດກັບຄືນແຂວງຄາລີເລ ດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດເຈົ້າ, ແລະ ຂ່າວເລື່ອງຂອງພຣະອົງໄດ້ຊ່າ-
ລືໄປທົ່ວດິນແດນທີ່ຢູ່ອ້ອມເຂດນັ້ນ.[15]ແລະພຣະອົງເລີ່ມສັ່ງສອນໃນໂຮງທັມະສາລາຂອງພວກເຂົາແລະທຸກຄົນກໍພາກັນສັນຣະເສີນພຣະອົງ.
[16]ພຣະອົງໄດ້ສະເດັດມາຍັງເມືອງນາຊາເຣັດ, ເມືອງທີ່ພຣະອົງຊົງຈະເຣີນໃຫຍ່ຂຶ້ນ ພຣະອົງໄດ້ສະເດັດເຂົ້າໄປໃນໂຮງທັມະສາລາໃນວັນສະບາ-
ໂຕຕາມເຄີຍ ແລະ ຊົງຢືນຂຶ້ນເພື່ອຈະອ່ານພຣະທັມ.[17]ພວກເຂົາໄດ້ຍື່ນພຣະຄັມພີມ້ວນຂອງເອຊາຢາຜູ້ປະກາດພຣະທັມໃຫ້ພຣະອົງ.
ພຣະອົງຊົງພືຫນັງສືພຣະທັມມ້ວນອອກກໍພົບຂໍ້ທີ່ຂຽນໄວ້ວ່າ,
[18]"ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພຣະເຈົ້າ, ເພາະຊົງໄດ້ຫົດສົງໃຫ້ຂ້າພຣະເຈົ້າປະກາດຂ່າວປະເສີດແກ່ຄົນຍາກຈົນ.
ພຣະອົງສົ່ງຂ້າພຣະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ແລະເປີດຕາຄົນຕາບອດໄດ້ເຫັນຮຸ່ງອີກ,
ເພື່ອປົດປ່ອຍຜູ້ຖືກບີບບັງຄັບເປັນອິສຣະ.[19]ເພື່ອປະກາດປີແຫ່ງຄວາມເມດຕາຂອງອົງພຣະຜູ້ເປັນເຈົ້າ."
[20]ຈາກນັ້ນພຣະອົງຊົງຮໍາຫນັງສືນັ້ນສົ່ງຄືນໃຫ້ເຈົ້າຫນ້າທີ່ ແລະຊົງນັ່ງລົງ. ສາຍຕາຂອງຄົນທັງປວງໃນໂຮງທັມະສາລາກໍຫລຽວເບິ່ງພຣະອົງ.
[21]ພຣະອົງຈຶ່ງຊົງຕັ້ງຕົ້ນກ່າວກັບພວກເຂົາວ່າ, "ພຣະ-
ຄັມພີທີ່ທ່ານໄດ້ຍິນວັນນີ້ໄດ້ສຳເລັດແລ້ວ."[22]ທຸກຄົນທີ່ຢູ່ໃນທີ່ນັ້ນເປັນພະຍານໃນສິ່ງທີ່ພຣະອົງກ່າວ ແລະຕ່າງກໍພາກັນປະ-
ຫລາດໃຈກັບຖ້ອຍຄຳແຫ່ງພຣະຄຸນ ຊຶ່ງອອກມາຈາກພຣະໂອດຂອງພຣະອົງ, ເຂົາຈຶ່ງເວົ້າກັນວ່າ,
"ຄົນຜູ້ນີ້ເປັນລູກຊາຍຂອງໂຢເຊັບບໍ່ແມ່ນຫລື?"
[23]ພຣະອົງຊົງກ່າວແກ່ເຂົາວ່າ, "ທ່ານທັງຫລາຍຄົງຈະກ່າວຄຳສຸພາສິດຂໍ້ນີ້ຕໍ່ເຮົາເປັນແນ່ວ່າ 'ນາຍຫມໍເອີຍ, ຈົ່ງປົວຕົວເອງໃຫ້ດີເຖີດ.
ອັນໃດກໍຕາມຊຶ່ງພວກເຮົາໄດ້ຍິນວ່າ ທ່ານໄດ້ກະທຳໃນເມືອງກາເປນາອູມ
ກໍຈົ່ງເຮັດໃນບ້ານເກີດເມືອງນອນຂອງຕົນທີ່ນີ້ເຫມືອນກັນ.'"[24]ແຕ່ພຣະອົງຊົງກ່າວອີກວ່າ, "ເຮົາບອກຄວາມຈິງວ່າກັບພວກທ່ານວ່າ ບໍ່ມີຜູ້ປະ-
ກາດພຣະທັມຄົນໃດໄດ້ຮັບຄວາມນັບຖືໃນບ້ານເກີດເມືອງນອນຂອງຕົນ.
[25]ແຕ່ເຮົາບອກຄວາມຈິງແກ່ພວກທ່ານວ່າ ໃນຄາວເອລີຢາ ມີແມ່ຫມ້າຍຫລາຍຄົນໃນແຜ່ນດິນອິສະຣາເອນ ຂະນະທີ່ຊົງອັດທ້ອງ-
ຟ້າເປັນເວລາສາມປີຫົກເດືອນແລະກໍເກີດການອຶດຢາກຢ່າງຫນັກທົ່ວແຜ່ນດິນ.[26]ແຕ່ເອລີຢາກໍບໍ່ໄດ້ຖືກສົ່ງໄປຫາຜູ້ໃດ ຍົກເວັ້ນແຕ່ແມ່-
ຫມ້າຍຄົນຫນຶ່ງໃນເມືອງຊາເຣຟັດແຂວງຊີໂດນທີ່ອາໄສຢູ່ທີ່ນັ້ນ.[27]ແລະມີຄົນຂີ້ທູດຫລາຍຄົນໃນແຜ່ນດິນອິດສະຣາເອນໃນຄາວຂອງເອລີ-
ຊາຜູ້ປະກາດພຣະທັມ, ແຕ່ບໍ່ມີຄົນໃດໄດ້ຮັບການຊົງຊຳຣະໃຫ້ດີສະອາດ ຍົກເວັ້ນແຕ່ ນາອາມານ ຊາວຊີເຣຍ."
[28]ເມື່ອຄົນທັງປວງໃນໂຮງທັມະສາລາພາກັນເຕັມໄປດ້ວຍຄວາມຄຽດເມື່ອໄດ້ຍິນຖ້ອຍຄຳເຫລົ່ານີ້[29]ພວກເຂົາຈຶ່ງພາກັນລຸກຂຶ້ນແລະຊຸກພຣະ-
ອົງອອກໄປນອກເມືອງ ແລະ ພາພຣະອົງໄປຍັງຫນ້າຜາຊັນບ່ອນເມືອງຕັ້ງຢູ່ ເພື່ອຫມາຍຈະຊຸກພຣະອົງລົງຫນ້າຜາ.[30]ແຕ່ພຣະ-
ອົງຊົງຍ່າງຜ່ານພວກເຂົາໄປ ແລະ ໄປຍັງທີ່ອີກແຫ່ງຫນຶ່ງ.
[31]ຈາກນັ້ນ ພຣະອົງໄດ້ສະເດັດລົງໄປເຖິງເມືອງກາເປນາອູມເຊິ່ງເປັນເມືອງຫນຶ່ງໃນແຂວງຄາລີເລ ແລະຊົງເລີ່ມຕົ້ນສັ່ງສອນພວກເຂົາທັງ-
ຫລາຍໃນວັນສະບາໂຕ.[32]ພວກເຂົາກໍປະຫລາດໃຈໃນຄຳສອນຂອງພຣະອົງ ເພາະພຣະອົງຊົງກ່າວດ້ວຍຣິດອຳນາດ.
[33]ໃນໂຮງທັມະສາລານັ້ນ ມີຊາຍຄົນຫນຶ່ງມີຜີຮ້າຍເຂົ້າສິງຢູ່ ແລະ ລາວໄດ້ຮ້ອງສຽງດັງວ່າ.[34]"ໂອ! ພວກເຮົາໄດ້ເຮັດອັນໃດໃຫ້ແກ່ທ່ານ, ເຢ-
ຊູໄທນາຊາເຣັດເອີຍ? ທ່ານມາເພື່ອທຳລາຍພວກເຮົາຫລື? ເຮົາກໍຮູ້ ວ່າທ່ານຄືອົງຜູ້ບໍຣິສຸດຂອງພຣະເຈົ້າ."
[35]ພຣະເຢຊູເຈົ້າຊົງຫ້າມຜີຮ້າຍໂດຍກ່າວວ່າ, "ມິດແມ ແລະອອກຈາກຄົນນີ້ເສຍ!' ເມື່ອຜີຮ້າຍເຮັດໃຫ້ຄົນນັ້ນລົ້ມລົງທ່າມກາງປະຊາຊົນແລ້ວ
ມັນໄດ້ອອກຈາກຜູ້ນັ້ນແລະບໍ່ໄດ້ເຮັດອັນຕະຣາຍແກ່ຄົນນັ້ນແຕ່ຢ່າງໃດ.[36]ຄົນທັງປວງກໍປະຫລາດໃຈ ແລະເວົ້າຕໍ່ກັນກ່ຽວກັບເລື່ອງນີ້.
ພວກເຂົາເວົ້າວ່າ, "ຄຳເວົ້າເຫລົ່ານີ້ເປັນຢ່າງໃດຫນໍ? ເພິ່ນໄດ້ສັ່ງຜີຖ່ອຍຮ້າຍດ້ວຍສິດອຳນາດແລະຣິດເດດ
ແລະພວກມັນກໍອອກມາ."[37]ແລະຊື່ສຽງຂອງພຣະເຢຊູເຈົ້າໄດ້ເລີ່ມຊ່າລືໄປທຸກບ່ອນທົ່ວຂົງເຂດນັ້ນ.
[38]ເມື່ອພຣະອົງອອກຈາກໂຮງທັມະສາລາ ແລະສະເດັດເຂົ້າໄປໃນເຮືອນຂອງຊີໂມນ. ແມ່ເມຍຂອງຊີໂມນລົ້ມປ່ວຍເປັນໄຂ້ແຮງຫລາຍ,
ແລະພວກເຂົາໄດ້ອ້ອນວອນພຣະເຢຊູເຈົ້າໃຫ້ໂຜດຮັກສານາງ.[39]ພຣະອົງຊົງຢືນຢູ່ຂ້າງນາງ ແລະຊົງຂະນາບຫ້າມອາການໄຂ້
ແລະໄຂ້ກໍເຊົາໃນທັນໃດນັ້ນ ນາງກໍລຸກຂຶ້ນບົວຣະບັດຮັບໃຊ້ພຣະອົງກັບພວກສາວົກ.

[40]ໃນເວລາຕາເວັນຕົກດິນ ປະຊາຊົນກໍພາທຸກຄົນທີ່ເຈັບເປັນພະຍາດຕ່າງໆ ມາຫາພຣະອົງ. ພຣະອົງກໍຊົງວາງພຣະຫັດໃສ່ເຂົາທຸກຄົນ
ແລະໂຜດໃຫ້ເຂົາດີທຸກຄົນ.[41]ພວກຜີມານຮ້າຍກໍໄດ້ອອກຈາກພວກເຂົາ, ພາກັນຮ້ອງແຜດສຽງ ແລະເວົ້າວ່າ, “ທ່ານເປັນພຣະບຸດຂອງພຣະ-
ເຈົ້າ” ແຕ່ພຣະເຢຊູຄຣິດເຈົ້າຊົງຫ້າມຜີຮ້າຍ ແລະ ບໍ່ໃຫ້ມັນເວົ້າ ເພາະພວກມັນຮູ້ແລ້ວວ່າພຣະອົງຊົງເປັນພຣະຄຣິດເຈົ້າ.
[42]ເມື່ອເຖິງເວລາຮຸ່ງເຊົ້າ ພຣະເຢຊູເຈົ້າກໍອອກໄປຍັງປ່າບ່ອນສະຫງັດ. ປະຊາຊົນກໍຊອກຫາພຣະອົງ ແລະມາຍັງສະຖານທີ່ໆພຣະອົງຊົງຢູ່.
ເມື່ອພົບແລ້ວພວກເຂົາກໍພະຍາຍາມຫນ່ວງຫນ່ຽວພຣະອົງໄວ້ບໍ່ໃຫ້ໄປຈາກພວກເຂົາ.[43]ແຕ່ພຣະອົງຊົງກ່າວແກ່ເຂົາວ່າ, “ເຮົາຕ້ອງປະ-
ກາດຂ່າວປະເສີດເລື່ອງຣາຊະອານາຈັກຂອງພຣະເຈົ້າແກ່ຄົນໃນເມືອງອື່ນໆ ອີກຫລວງຫລາຍ, ເພາະ-
ນີ້ເປັນເຫດຜົນທີ່ເຮົາຖືກສົ່ງມາທີ່ນີ້.”[44]ຈາກນັ້ນພຣະເຢຊູເຈົ້າຊົງເທສະຫນາປ່າວປະກາດໃນໂຮງທັມະສາລາຕະຫລອດທີ່ແຂວງຢູດາຍຕໍ່ໄປ.

5 [1]ບັດນີ້ສິ່ງທີ່ເກີດຂຶ້ນເມື່ອປະຊາຊົນກຳລັງບຸບຽດພຣະເຢຊູເຈົ້າແລະຟັງພຣະທັມຂອງພຣະເຈົ້າ, ພຣະເຢຊູເຈົ້າຊົງຢືນຢູ່ແຄມທະເລສາບເຄັນ-
ເນຊາເຣັດ.[2]ພຣະອົງຊົງເຫັນເຮືອສອງລຳກຳລັງຖືກລາກຂຶ້ນມາຮິມຝັ່ງທະເລສາບນັ້ນ. ພວກຄົນຫາປາໄດ້ອອກໄປຈາກເຮືອ ແລະເຂົາກຳ-
ລັງລ້າງມອງຂອງພວກເຂົາ.[3]ພຣະເຢຊູຈຶ່ງໄດ້ສະເດັດເຂົ້າໄປໃນເຮືອລຳຫນຶ່ງ ຄືເຮືອຂອງຊີໂມນແລ້ວ
ພຣະອົງຂໍໃຫ້ເຂົາຖອຍເຮືອອອກໄປໃນທະເລສາບໂດຍຫ່າງອອກໄປຈາກຝັ່ງຫນ້ອຍຫນຶ່ງ ແລ້ວພຣະອົງຈຶ່ງປະທັບລົງແລະສັ່ງສອນປະຊາ-
ຊົນຈາກເຮືອລຳນັ້ນ.

[4]ເມື່ອພຣະອົງຊົງສັ່ງສອນສຳເລັດແລ້ວ, ພຣະອົງຊົງກ່າວຕໍ່ຊີໂມນວ່າ, “ຈົ່ງພາຍເຮືອອອກໄປບ່ອນນ້ຳເລິກ ແລະ
ຢ່ອນມອງຂອງພວກທ່ານລົງຈັບປາ.”[5]ຊີໂມນທູນຕອບວ່າ, “ອາຈານເຈົ້າເອີຍ, ພວກຂ້ານ້ອຍໄດ້ຫາຈົນອິດເມື່ອຍຫມົດຄືນ ແລະ ຈັບປາບໍ່ໄດ້ເລີຍ
ແຕ່ເພາະພຣະອົງສັ່ງ ຂ້ານ້ອຍຈະຢ່ອນມອງລົງໄປຈັບປາ.”[6]ເມື່ອພວກເຂົາຢ່ອນລົງແລ້ວ ພວກເຂົາຈັບປາໄດ້ຈຳນວນຫລາຍ
ຈົນມອງຂອງເຂົາພວມຈະຂາດ.[7]ດັ່ງນັ້ນພວກເຂົາຈຶ່ງກວັກມືເອົາຫມູ່ທີ່ຢູ່ເຮືອລຳອື່ນໃຫ້ມາຊ່ອຍ. ເມື່ອເຂົາມາຊ່ອຍ ແລະ
ເຮືອທັງສອງລຳຂອງພວກເຂົາກໍເຕັມຈົນເຮືອເກືອບຫລົ້ມ.
[8]ແຕ່ເມື່ອຊີໂມນເປໂຕໄດ້ເຫັນດັ່ງນັ້ນ ເພິ່ນຈຶ່ງຂາບລົງທີ່ຕີນຂອງພຣະເຢຊູຄຣິດເຈົ້າ ແລະ ທູນວ່າ, “ອົງພຣະຜູ້ເປັນເຈົ້າ,
ຂໍເຊີນໄປໃຫ້ຫ່າງຈາກຂ້ານ້ອຍຖ້ອນ, ເພາະຂ້ານ້ອຍເປັນຄົນບາບ.”[9]ເປໂຕກັບຄົນທັງຫລາຍທີ່ຢູ່ນຳກັນນັ້ນ
ຕ່າງກໍງຶດປະຫລາດໃຈກ່ຽວກັບເຫດການທີ່ພວກເຂົາຈັບປາໄດ້ນັ້ນ.[10]ຄົນເຫລົ່ານີ້ລວມທັງຢາໂກໂບແລະໂຢຮັນ ລູກຊາຍຂອງເຊເບດາຍ
ທີ່ເປັນຫມູ່ຮ່ວມງານກັບຊີໂມນ ແລະພຣະເຢຊູເຈົ້າຊົງກ່າວກັບຊີໂມນວ່າ, “ຢ່າຢ້ານເລີຍ ເພາະຕັ້ງ-
ແຕ່ນີ້ໄປທ່ານຈະເປັນຜູ້ຫາຄົນ.”[11]ເມື່ອພວກເຂົາໄດ້ນຳເຮືອມາເຖິງຝັ່ງແລ້ວ, ພວກເຂົາກໍສະຫລະສິ່ງສາຣະພັດໄວ້ບ່ອນນັ້ນແລ້ວຕາມພຣະອົງໄປ.
[12]ໃນຂະນະທີ່ພຣະເຢຊູເຈົ້າຢູ່ໃນເມືອງໆຫນຶ່ງ, ມີຊາຍຄົນຫນຶ່ງທີ່ປ່ວຍເປັນຂີ້ທູດເຕັມຕົວ ເມື່ອຄົນນັ້ນໄດ້ເຫັນພຣະ-
ເຢຊູເຈົ້າກໍກົ້ມຂາບລົງແລະອ້ອນວອນພຣະອົງວ່າ, “ພຣະອົງເຈົ້າເອີຍ, ຖ້າຫາກພຣະອົງພໍໃຈ ຂ້າພະອົງກໍຈະຫາຍສະ-
ອາດ.”[13]ແລ້ວພຣະເຢຊູເຈົ້າຈຶ່ງຊົງຢຽດພຣະຫັດອອກຖືກຄົນນັ້ນ, ພຣະອົງຊົງກ່າວວ່າ, “ເຮົາພໍໃຈແລ້ວ ຈົ່ງດີສະອາດເຖີດ” ພະຍາດຂີ້-
ທູດກໍຫາຍໄປຈາກຄົນນັ້ນທັນທີ.
[14]ພຣະອົງຈຶ່ງສັ່ງຫ້າມຜູ້ນັ້ນບໍ່ໃຫ້ບອກຜູ້ໃດ ແຕ່ພຣະອົງຊົງກ່າວກັບລາວວ່າ, “ຈົ່ງໄປຕາມທາງຂອງທ່ານ ແລະສະແດງຕົວຕໍ່ປະໂຣຫິດ
ແລະຖວາຍເຄື່ອງບູຊາສຳລັບການຮັກສາໃຫ້ສະອາດຂອງທ່ານ ຕາມທີ່ໂມເຊໄດ້ສັ່ງໄວ້ເພື່ອເປັນຄຳພະຍານຕໍ່ພວກເຂົາ.”
[15]ແຕ່ຊື່ສຽງຂອງພຣະເຢຊູເຈົ້າແຮງຊ່ຳລືເຜີຍແຜ່ໄປໄກອີກ ແລະ ປະຊາຊົນຈຳນວນຫລາຍໄດ້ຊຸມນຸມກັນເພື່ອຟັງຄຳສັ່ງສອນຂອງພຣະອົງ
ແລະເພື່ອຈະຊົງໂຜດຮັບການຮັກສາໃຫ້ຫາຍດີຈາກພະຍາດຕ່າງໆ.[16]ແຕ່ພຣະອົງມັກສະເດັດອອກໄປສະຖານທີ່ປ່ຽວ ແລະ ອະທິຖານ.
[17]ຢູ່ມາວັນຫນຶ່ງເມື່ອພຣະອົງກຳລັງສັ່ງສອນຢູ່, ມີພວກຟາຣີຊາຍແລະພວກອາຈານສອນບັນຍັດນັ່ງຢູ່ທີ່ນັ້ນດ້ວຍ
ພວກເຂົາມາຈາກບ້ານຕ່າງໆໃນແຂວງຄາລີເລ, ແຂວງຢູດາຍ ແລະ ຈາກນະຄອນເຢຣູຊາເລັມ. ຣິດເດດອຳນາດຂອງອົງພຣະຜູ້ເປັນ-
ເຈົ້າກໍສະຖິດຢູ່ກັບພຣະອົງ ເພື່ອການຮັກສາພະຍາດ.
[18]ມີຜູ້ຊາຍບາງຄົນໄດ້ຫາມຄົນເປັ້ຽຜູ້ຫນຶ່ງນອນຢູ່ເທິງບ່ອນນອນນັ້ນມາຫາພຣະອົງ, ພວກເຂົາພະຍາ-
ຍາມຫາທາງທີ່ຈະຫາມຄົນເປັ້ຽນັ້ນເຂົ້າມາດ້ານໃນ ເພື່ອວາງຕໍ່ພຣະພັກຂອງພຣະເຢຊູເຈົ້າ.
[19]ພວກເຂົາບໍ່ສາມາດຫາທາງເຂົ້າໄປໄດ້ເພາະມີຝູງຄົນບຽດກັນແຫນ້ນຫນາໄປຫມົດ, ດັ່ງນັ້ນພວກເຂົາຈຶ່ງຂຶ້ນຫລັງຄາເຮືອນ
ແລ້ວຢ່ອນຄົນເປ້ຍກັບທັງບ່ອນນອນລົງມາຕໍ່ພຣະພັກພຣະເຢຊູເຈົ້າທ່າມກາງຝູງຄົນທັງຫລາຍ.
[20]ພຣະເຢຊູເຈົ້າຊົງເຫັນຄວາມເຊື່ອຂອງເຂົາແລ້ວກໍຊົງກ່າວກັບຄົນເປັ້ຽນັ້ນວ່າ, “ລູກເອີຍ,
ຄວາມຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ.”[21]ຝ່າຍພວກນັກທັມແລະພວກຟາຣີຊາຍ ກໍຕັ້ງຕົ້ນຄຳຖາມກ່ຽວກັບສິ່ງນີ້ ພວກເຂົາເວົ້າວ່າ,
“ຜູ້ນີ້ເປັນໃຜຈຶ່ງໄດ້ເວົ້າຫມິ່ນປະຫມາດພຣະເຈົ້າເຊັ່ນນີ້? ໃຜນໍຈະຍົກຄວາມຜິດບາບໄດ້ ນອກຈາກພຣະເຈົ້າແຕ່ອົງດຽວເທົ່ານັ້ນ?”
[22]ແຕ່ພຣະເຢຊູເຈົ້າຊົງຮູ້ຄວາມຄຶດຂອງພວກເຂົາ ຈຶ່ງຊົງກ່າວຕອບພວກເຂົາວ່າ, “ເປັນຫຍັງພວກທ່ານຈຶ່ງຕັ້ງຄຳຖາມນີ້ໃນຫົວໃຈຂອງພວກທ່ານ?
[23]ອັນໃດຈະງ່າຍກວ່າກັນຫລືກັບການທີ່ຈະວ່າ ‘ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ’ ຫລື
‘ຈົ່ງລຸກຂຶ້ນແລະຍ່າງໄປ?’[24]ແຕ່ເຫມືອນກັບທີ່ພວກທ່ານອາດຮູ້ໄດ້ວ່າ ບຸດມະນຸດມີສິດອຳນາດເທິງແຜ່ນດິນໂລກນີ້ ເພື່ອໃຫ້ອະ-
ພັຍຄວາມຜິດບາບໄດ້, ເຮົາບອກກັບທ່ານວ່າ “ຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າແລະກັບບ້ານຂອງທ່ານ.”
[25]ໃນທັນໃດນັ້ນຄົນເປັ້ຽໄດ້ລຸກຂຶ້ນຕໍ່ຫນ້າຄົນທັງປວງ ແລະຍົກເອົາບ່ອນນອນຊຶ່ງຕົນໄດ້ນອນນັ້ນກັບໄປບ້ານຂອງຕົນ ພ້ອມທັງຮ້ອງສັນຣະ-
ເສີນແດ່ພຣະເຈົ້າ.[26]ທຸກຄົນຕ່າງກໍງຶດປະຫລາດໃຈຫລາຍແລະພວກເຂົາພາກັນສັນຣະເສີນພຣະເຈົ້າ. ພວກເຂົາເຕັມໄປດ້ວຍຄວາມຢ້ານ
ແລະເວົ້າກັນວ່າ, “ວັນນີ້ພວກເຮົາ ໄດ້ເຫັນສິ່ງທີ່ອັດສະຈັນເກີດຂຶ້ນ.”
[27]ຫລັງຈາກເຫດການເຫລົ່ານີ້ເກີດຂຶ້ນ ພຣະເຢຊູເຈົ້າສະເດັດອອກໄປຈາກທີ່ນັ້ນ ແລະພຣະອົງເຫັນຄົນເກັບພາສີຜູ້ຫນຶ່ງຊື່ ເລວີ ນັ່ງຢູ່ດ່ານພາສີ.
ພຣະອົງຈຶ່ງບອກທ່ານວ່າ, “ຈົ່ງຕາມເຮົາມາ.”[28]ແລ້ວເລວີກໍລຸກຂຶ້ນ ຕາມພຣະອົງໄປ ແລະສະຫລະຖິ້ມຫມົດທຸກສິ່ງເອົາໄວ້.
[29]ແລ້ວເລວີຈຶ່ງໄດ້ຈັດໃຫ້ມີງານລ້ຽງອັນໃຫຍ່ຕ້ອນຮັບພຣະເຢຊູເຈົ້າໃນເຮືອນຂອງຕົນ. ມີຄົນເກັບພາສີຈຳນວນຫລາຍທີ່ຢູ່ທີ່ນັ້ນ ແລະຄົນອື່ນໆ
ໄດ້ເຂົ້າຮ່ວມນັ່ງທີ່ໂຕະແລະຮັບປະທານອາຫານນຳພຣະອົງ.[30]ແຕ່ພວກຟາຣີຊາຍແລະພວກທັມະຈານກຳລັງຈົ່ມຕິຕຽນພວກສິດຂອງພຣະອົງ,
ພວກເຂົາເວົ້າວ່າ, “ເປັນຫຍັງພວກເຈົ້າຈຶ່ງກິນແລະດື່ມດ້ວຍກັນກັບພວກເກັບພາສີແລະພວກຄົນບາບອື່ນໆ?”[31]ພຣະເຢຊູເຈົ້າຊົງຕອບເຂົາວ່າ,
“ຄົນທີ່ມີສຸຂະພາບດີບໍ່ຕ້ອງການຫມໍຮັກສາ ມີແຕ່ຄົນປ່ວຍເທົ່ານັ້ນທີ່ຕ້ອງການຫມໍ.[32]ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມໃຫ້ກັບໃຈ
ແຕ່ມາເອີ້ນເອົາຄົນບາບໃຫ້ກັບໃຈ.”
[33]ພວກເຂົາໄດ້ທູນພຣະອົງວ່າ, “ພວກລູກສິດຂອງໂຢຮັນຖືສິນອົດອາຫານແລະອະທິຖານຢູ່ເລື້ອຍ ແລະລູກສິດຂອງພວກຟາ-
ຣີຊາຍກໍເຮັດເຫມືອນກັນ. ແຕ່ສາວົກຂອງທ່ານພັດກິນແລະດື່ມ.”[34]ພຣະເຢຊູເຈົ້າຊົງຕອບເຂົາວ່າ, “ມີສະ-
ຫາຍຂອງເຈົ້າບ່າວຄົນໃດທີ່ຖືສິນອົດອາຫານໃນຂະນະທີ່ເຈົ້າບ່າວຍັງຢູ່ກັບພວກເຂົາ?”[35]ແຕ່ວັນນັ້ນຈະມາເຖິງ
ເມື່ອເຈົ້າບ່າວຖືກຍົກຍ້າຍໄປຈາກພວກເຂົາ, ເມື່ອນັ້ນແຫລະພວກເຂົາຈຶ່ງຈະຖືສິນອົດອາຫານ.”

[36]ແລ້ວພຣະເຢຊູຈຶ່ງກ່າວຄຳອຸປະມາຂໍ້ຫນຶ່ງແກ່ພວກເຂົາວ່າ, “ບໍ່ຫ່ອນມີຜູ້ໃດຈີກເອົາຜ້າຈາກເສື້ອໃຫມ່ມາຕາບເສື້ອເກົ່າ. ເພາະຖ້າເຂົາເຮັດດັ່ງ-
ນັ້ນກໍຈະເຮັດໃຫ້ເສື້ອໃຫມ່ຂາດເສຍໄປ ແລະຜ້າທີ່ເອົາມາຈາກເສື້ອໃຫມ່ກໍຈະບໍ່ສົມກັບເສື້ອເກົ່າເຫມືອນກັນ.
[37]ບໍ່ມີຜູ້ໃດເອົານ້ຳອະງຸ່ນໃຫມ່ມາໃສ່ໄວ້ໃນຖົງຫນັງເກົ່າ. ຖ້າເຮັດດັ່ງນັ້ນນ້ຳອະງຸ່ນໃຫມ່ຈະເຮັດໃຫ້ຖົງຫນັງນັ້ນຂາດໄປ, ນ້ຳອະງຸ່ນຈະໄຫລອອກ,
ແລ້ວຖົງຫນັງກໍຈະເສຍໄປໃຊ້ການບໍ່ໄດ້.[38]ແຕ່ນ້ຳອະງຸ່ນໃຫມ່ຕ້ອງໃສ່ໄວ້ໃນຖົງຫນັງໃຫມ່.[39]ແລະບໍ່ມີຜູ້ໃດເມື່ອກິນນ້ຳອະງຸ່ນເກົ່າແລ້ວ
ຈະຢາກໄດ້ນ້ຳອະງຸ່ນໃຫມ່ເພາະເພິ່ນຍ່ອມເວົ້າວ່າ ‘ອັນເກົ່ານັ້ນແຫລະດີກວ່າ’.”


generated on Tue Jun 17 19:01:42 2025

6 [1]ເມື່ອເຖິງວັນສະບາໂຕ ໃນຂະນະທີ່ພຣະເຢຊູເຈົ້າສະເດັດຜ່ານທົ່ງນາໄປ, ພວກສາວົກຂອງພຣະອົງໄດ້ເດັດເອົາຮວງເຂົ້າ ແລະ ໃສ່ຝາມື ແລະ
ກິນເມັດເຂົ້ານັ້ນ.[2]ແຕ່ພວກຟາຣີຊາຍບາງຄົນທູນຖາມວ່າ, “ເປັນຫຍັງພວກທ່ານຈຶ່ງຜິດຕໍ່ກົດພຣະບັນຍັດໃນວັນສະບາໂຕ?”

[3]ພຣະເຢຊູເຈົ້າຊົງຕອບເຂົາວ່າ, “ພວກທ່ານຍັງບໍ່ໄດ້ອ່ານເຖິງເລື່ອງທີ່ດາວິດໄດ້ເຮັດຕອນທີ່ທ່ານຫິວ ທັງດາວິດແລະພັກພວກຂອງເພິ່ນຫລື?
[4]ເພິ່ນໄດ້ເຂົ້າໄປໃນພຣະວິຫານຂອງພຣະເຈົ້າ ແລະເອົາເຂົ້າຈີ່ທີ່ຕັ້ງຖວາຍແກ່ພຣະເຈົ້າມາຮັບປະທານ
ແລະປັນໃຫ້ພັກພວກຂອງຕົນຮັບປະທານເຫມືອນກັນ ຊຶ່ງພຣະບັນຍັດຈະກໍານົດແຕ່ປະໂຣຫິດເທົ່ານັ້ນທີ່ສາມາດຮັບປະທານໄດ້.”[5]ແລ້ວພຣະ-
ອົງຊົງບອກພວກເຂົາວ່າ, “ບຸດມະນຸດເປັນເຈົ້ານາຍເຫນືອວັນສະບາໂຕ.”
[6]ໃນວັນສະບາໂຕອີກວັນຫນຶ່ງ ພຣະອົງໄດ້ສະເດັດເຂົ້າໄປໃນໂຮງທັມະສາລາ ແລະສັ່ງສອນປະຊາຊົນທີ່ນັ້ນ.
ມີຊາຍຄົນຫນຶ່ງທີ່ມີມືເບື້ອງຂວາລີບຢູ່ທີ່ນັ້ນ.[7]ພວກທັມະຈານແລະພວກຟາຣີຊາຍຊອມເບິ່ງວ່າ ພຣະອົງຈະຊົງຮັກສາໃຜໃຫ້ດີໃນວັນສະບາ-
ໂຕຫລືບໍ່ ເພື່ອທີ່ເຂົາຈະຫາເຫດຟ້ອງພຣະອົງໃນການເຮັດຜິດ.[8]ແຕ່ພຣະອົງຊົງຊາບຄວາມຄຶດຂອງຄົນເຫລົ່ານັ້ນ ຈຶ່ງຊົງບອກຄົນມືລີບນັ້ນວ່າ,
“ລຸກຂຶ້ນແລະມາຢືນຢູ່ເຄິ່ງກາງຂອງທຸກຄົນ” ດັ່ງນັ້ນ ລາວຈຶ່ງລຸກຂຶ້ນແລະຢືນຢູ່ທີ່ນັ້ນ.
[9]ພຣະເຢຊູເຈົ້າຖາມພວກເຂົາວ່າ "ເຮົາຖາມທ່ານວ່າ, ອັນໃດທີ່ເປັນການເຮັດຕາມພຣະບັນຍັດໃນວັນສະບາໂຕ ການເຮັດດີ ຫລື ການເຮັດຊົ່ວ,
ການຊ່ວຍຊີວິດໄວ້ ຫລື ການໃຫ້ທໍາລາຍຊີວິດເສັຍ?”.[10]ແລ້ວພຣະອົງຈຶ່ງທອດພຣະເນດເບິ່ງອ້ອມເຂົາທຸກຄົນ ແລະຊົງກ່າວແກ່ຄົນມືລີບນັ້ນວ່າ,
“ຈົ່ງຢຽດມືຂອງເຈົ້າອອກມາ” ຄົນນັ້ນກໍເຮັດຕາມ, ມືຂອງລາວກໍດີເປັນປົກກະຕິ.[11]ແຕ່ຄົນເຫລົ່າ-
ນັ້ນກໍເຕັມໄປດ້ວຍຄວາມຄຽດແຄ້ນ ແລະໄດ້ປຶກສາກັນວ່າຈະເຮັດຢ່າງໃດກັບພຣະເຢຊູເຈົ້າ.
[12]ໃນຄາວນັ້ນ ພຣະເຢຊູເຈົ້າໄດ້ສະເດັດຂຶ້ນໄປເທິງພູເຂົາເພື່ອພາວັນນາອະທິຖານ ພຣະອົງອະທິຖານຕໍ່ພຣະເຈົ້າຢູ່ນັ້ນຕະຫລອດຄືນ.
[13]ຄັນພໍຮຸ່ງເຊົ້າພຣະອົງໄດ້ຊົງເອີ້ນເອົາພວກສາວົກມາຫາພຣະອົງ, ພຣະອົງຊົງເລືອກເອົາສິບສອງຄົນໃນພວກເຂົາ, ເຊິ່ງເປັນຜູ້ທີ່ພຣະອົງຊົງຕັ້ງຊື່-
ວ່າ ອັກຄະສາວົກ.
[14]ລາຍຊື່ຂອງບັນດາອັກຄະສາວົກ ຄື ຊີໂມນ (ຜູ້ທີ່ພຣະອົງຊົງຕັ້ງຊື່ອີກວ່າ ເປໂຕ) ແລະອັນເດອາ ນ້ອງຊາຍຂອງລາວ, ຢາໂກໂບແລະໂຢຮັນ, ຟີ-
ລິບແລະບາຣະໂທໂລມາຍ.[15]ມັດທາຍແລະໂທມາ, ຢາໂກໂບລູກຊາຍຂອງອາລະຟາຍ, ຊີໂມນ(ຜູ້ທີ່ເອີ້ນກັນວ່າ. ເຊໂລເຕ)[16]ຢູດາລູກຊາຍຂອງຢາ-
ໂກໂບ, ແລະຢູດາອິສະກາຣີອົດ ຜູ້ທີ່ກາຍເປັນຄົນທໍຣະຍົດ.
[17]ເມື່ອພຣະເຢຊູເຈົ້າໄດ້ສະເດັດລົງມາຈາກພູເຂົາ ພ້ອມກັບພວກສາວົກ ແລະຊົງຢືນຢູ່ທີ່ຮາບພຽງ ພວກສາວົກຂອງພຣະອົງຫລາຍຄົນກໍຢູ່ທີ່ນັ້ນ
ເຊັ່ນດຽວກັນກັບປະຊາຊົນຈໍານວນຫລວງຫລາຍທີ່ມາຈາກທົ່ວແຂວງຢູດາຍ, ຈາກນະຄອນເຢຣູຊາເລັມ, ແລະຈາກຝັ່ງທະເລເຂດເມືອງຕີ-
ເຣກັບເມືອງຊີໂດນ.[18]ພວກເຂົາໄດ້ມາພຣະອົງ ເພື່ອຟັງພຣະອົງ ແລະເພື່ອໃຫ້ໂຜດດີພະຍາດຕ່າງໆຂອງເຂົາ.
ບັນດາຄົນທີ່ທຸກທໍຣະມານຈາກຜີຖ່ອຍຮ້າຍ ກໍຊົງໂຜດໃຫ້ດີເຫມືອນກັນ.[19]ທຸກຄົນໃນປະຊາຊົນຕ່າງກໍພະຍາຍາມຈະແຕະຕ້ອງພຣະອົງ
ເພາະຣິດເດດແຫ່ງການຮັກສາໂຣກອອກມາຈາກພຣະອົງ ແລະພຣະອົງຊົງຮັກສາພວກເຂົາໃຫ້ດີພະຍາດທຸກຄົນ.
[20]ແລ້ວພຣະອົງທອດພະເນດຫລຽວເບິ່ງພວກສາວົກແລະຊົງກ່າວວ່າ, “ທ່ານທັງຫລາຍທີ່ຍາກຈົນກໍເປັນສຸກ ເພາະຣາຊະອານາຈັກຂອງພຣະ-
ເຈົ້າເປັນຂອງພວກທ່ານ.[21]ທ່ານທັງຫລາຍທີ່ອຶດຢາກດຽວນີ້ກໍເປັນສຸກ ເພາະວ່າທ່ານຈະໄດ້ອີ່ມເຕັມ. ທ່ານທັງຫລາຍທີ່ຮ້ອງໄຫ້ດຽວນີ້ກໍເປັນສຸກ,
ເພາະວ່າພວກທ່ານຈະໄດ້ຫົວ.”
[22]“ເມື່ອຄົນທັງຫລາຍກຽດຊັງພວກທ່ານກໍເປັນສຸກ ແລະເມື່ອພວກເຂົາຂັບໄລ່ທ່ານ, ແລະປະຕິເສດຊື່ຂອງພວກທ່ານວ່າຊົ່ວຮ້າຍ
ເພາະເຫັນແກ່ບຸດມະນຸດ.[23]ຈົ່ງຊື່ນຊົມຍິນດີໃນວັນນັ້ນ ແລະຕື່ນເຕັ້ນດ້ວຍຄວາມຍິນດີ.
ເພາະທ່ານຫມັ້ນໃຈວ່າຈະໄດ້ບໍາເຫນັດອັນຍິ່ງໃຫຍ່ໃນສະຫວັນ ເພາະວ່າບັນພະບຸຣຸດຂອງພວກເຂົາໄດ້ເຮັດຢ່າງນັ້ນ
ແກ່ຜູ້ປະກາດພຣະທັມເຫມືອນກັນ.
[24]“ແຕ່ວິບັດຈົ່ງມີແກ່ທ່ານທັງຫລາຍຜູ້ເປັນຄົນຮັ່ງມີ ເພາະວ່າພວກທ່ານໄດ້ຮັບຄວາມສຸກສະບາຍແລ້ວ.
[25]ວິບັດຈົ່ງມີແກ່ທ່ານທັງຫລາຍທີ່ອີ່ມເຕັມດຽວນີ້, ເພາະວ່າພວກທ່ານຈະອຶດຢາກໃນພາຍຫລັງ. ວິບັດຈົ່ງມີແກ່ທ່ານທັງຫລາຍທີ່ຫົວຢູ່ດຽວນີ້,
ເພາະວ່າພວກທ່ານຈະທຸກໂສກແລະຮ້ອງໄຫ້ພາຍຫລັງ.”
[26]“ວິບັດຈົ່ງມີແກ່ພວກທ່ານ ເມື່ອຄົນທັງຫລາຍຍ້ອງຍໍວ່າທ່ານດີ,
ເພາະບັນພະບຸຣຸດຂອງພວກເຂົາກໍໄດ້ເວົ້າຢ່າງດຽວກັນນັ້ນຕໍ່ຜູ້ປະກາດພຣະທັມປອມເຫມືອນກັນ.”
[27]“ແຕ່ເຮົາບອກແກ່ທ່ານທີ່ກໍາລັງຟັງຢູ່ວ່າ ຈົ່ງຮັກສັດຕຣູຂອງພວກທ່ານແລະເຮັດດີແກ່ຜູ້ກຽດຊັງພວກທ່ານ.
[28]ຈົ່ງອວຍພອນແກ່ຜູ້ທີ່ປ້ອຍດ່າພວກທ່ານ, ແລະຈົ່ງອ້ອນວອນເພື່ອຜູ້ທີ່ກ່າວຫຍາບຊ້າຕໍ່ພວກທ່ານ.
[29]ຖ້າຜູ້ໃດຕົບແກ້ມຂອງທ່ານເບື້ອງຫນຶ່ງ ຈົ່ງປິ່ນອີກເບື້ອງຫນຶ່ງໃຫ້ເຂົາ. ຖ້າຜູ້ໃດຍາດເອົາເສື້ອຊັ້ນນອກຂອງທ່ານໄປ
ຢ່າຫວງຫ້າມທີ່ຈະເອົາເສື້ອໃນໃຫ້ພວກເຂົາ.[30]ຈົ່ງໃຫ້ແກ່ທຸກຄົນທີ່ຂໍຈາກທ່ານ ຖ້າຜູ້ໃດເອົາສິ່ງທີ່ເປັນຂອງທ່ານໄປ,
ຢ່າຊູ່ທວງຖາມເພື່ອທີ່ຈະເອົາຄືນ.
[31]ທ່ານຈົ່ງປະຕິບັດຕໍ່ຄົນທັງປວງເຫມືອນຢ່າງທ່ານຢາກໃຫ້ເຂົາປະຕິບັດຕໍ່ທ່ານ.[32]ຖ້າທ່ານຮັກຄົນທັງຫລາຍທີ່ຮັກທ່ານ
ທ່ານຈະໄດ້ຮັບການຍົກຍ້ອງຫລື? ເພາະເຖິງແມ່ນຄົນບາບກໍຍັງຮັກຄົນທີ່ຮັກເຂົາເຫມືອນກັນ.[33]ຖ້າທ່ານເຮັດດີສະເພາະແຕ່ຄົນທີ່ເຮັດດີຕໍ່ທ່ານ
ຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ? ເພາະຄົນບາບກໍຍັງເຮັດຢ່າງດຽວກັນ.[34]ຖ້າທ່ານທັງຫລາຍໃຫ້ຢືມແກ່ຜູ້ທີ່ທ່ານຫວັງວ່າຈະໄດ້ຮັບຄືນ
ທ່ານຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ? ແມ່ນແຕ່ຄົນບາບກໍຍັງໃຫ້ຄົນບາບຢືມໂດຍຫວັງວ່າຈະໄດ້ຮັບຄືນກັບມາເຕັມຈໍານວນ.
[35]ແຕ່ຈົ່ງຮັກສັດຕຣູຂອງທ່ານທັງຫລາຍແລະຈົ່ງເຮັດດີຕໍ່ເຂົາ ຈົ່ງໃຫ້ເຂົາຢືມໂດຍບໍ່ຫວັງຈະໄດ້ຮັບຄືນ ແລະທ່ານຈະໄດ້ຮັບບໍາເຫນັດທີ່ຍິ່ງໃຫຍ່,
ທ່ານທັງຫລາຍຈະໄດ້ເປັນບຸດຂອງພຣະເຈົ້າຜູ້ສູງສຸດ ເພາະວ່າພຣະອົງຍັງຊົງພຣະກາຣຸນາ ແກ່ຄົນທີ່ເນຣະຄຸນແລະຄົນຊົ່ວ.
[36]ຈົ່ງມີຄວາມເມດຕາກະຣຸນາ ເຫມືອນຢ່າງພຣະບິດາຂອງທ່ານຊົງມີພຣະທັຍເມດຕາກະຣຸນາ.
[37]“ຢ່າໄດ້ຕັດສິນ ແລະ ທ່ານຈະບໍ່ຖືກຕັດສິນ. ຢ່າສາບແຊ່ງໃຜ ແລະ ທ່ານຈະບໍ່ຖືກສາບແຊ່ງ. ຈົ່ງຍົກ-
ໂທດໃຫ້ເຂົາ ແລະ ທ່ານຈະໄດ້ຮັບການຍົກໂທດ.


generated on Tue Jun 17 19:01:42 2025

38ຈົ່ງໃຫ້ຄົນອື່ນ ແລະທ່ານຈະໄດ້ຮັບເຫມືອນກັນ ໃນຈຳນວນທີ່ຫລາຍ ແລະລົ້ນໄຫລ ເຊິ່ງຈະເທລົງເທິງຕັກຂອງທ່ານ. ເພາະ-
ວ່າພວກທ່ານຈະຕວງໃຫ້ເຂົາດ້ວຍເຄື່ອງຜອງອັນໃດ ກໍຈະຊົ່ງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ.”
39ແລ້ວພຣະອົງຊົງກ່າວແກ່ເຂົາເປັນຄຳອຸປະມາວ່າ, “ຄົນຕາບອດຈະຈູງຄົນຕາບອດໄປບໍ່ໄດ້ບໍ? ຖ້າເຂົາເຮັດແບບນັ້ນ ທັງສອງຈະບໍ່ຕົກໃນຂຸມ
ບໍ່ແມ່ນບໍ?40ສິດບໍ່ຫ່ອນໃຫຍ່ກວ່າຄຣູ ແຕ່ສິດທຸກຄົນທີ່ຮັບການຝຶກຝົນຢ່າງດີແລ້ວ ກໍຈະເປັນ ເຫມືອນຄຣູຂອງພວກເຂົາ.
41ເປັນຫຍັງທ່ານຫລຽວເຫັນຂີ້ເຫຍື່ອທີ່ຢູ່ໃນຕາພີ່ນ້ອງຂອງທ່ານ ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຕົນເອງທ່ານບໍ່ຮູ້ສຶກ.42ດ້ວຍເຫດ-
ໃດທ່ານຈຶ່ງຈະເວົ້າກັບພີ່ນ້ອງຂອງຕົນໄດ້ວ່າ ‘ພີ່ນ້ອງເອີຍ, ໃຫ້ຂ້ອຍເຂັ່ຍຂີ້ເຫຍື່ອອອກຈາກຕາຂອງເຈົ້າ’ ແຕ່ທ່ານເອງໄມ້ທັງທ່ອນທີ່-
ຢູ່ໃນຕາຂອງຕົນກໍຍັງບໍ່ເຫັນ ໂອ ຄົນຫນ້າຊື່ໃຈຄົດເອີຍ, ຈົ່ງເອົາໄມ້ທັງທ່ອນອອກຈາກຕາຂອງຕົນກ່ອນ ແລ້ວທ່ານຈະເຫັນໄດ້ຄັກ
ຈຶ່ງຈະເຂັ່ຍຂີ້ເຫຍື່ອອອກຈາກຕາພີ່ນ້ອງຂອງທ່ານໄດ້.
43“ເພາະບໍ່ມີຕົ້ນໄມ້ດີທີ່ເກີດຜົນບໍ່ດີ ແລະຕົ້ນໄມ້ບໍ່ດີກໍບໍ່ຫ່ອນເກີດຜົນດີ.44ເພາະວ່າຈະຮູ້ຈັກຕົ້ນໄມ້ທຸກຕົ້ນໄດ້ກໍເພາະຜົນຂອງມັນ ເຫດວ່າເຂົາບໍ່-
ຫ່ອນເກັບຫມາກເດື່ອເທດຈາກຕົ້ນມີຫນາມ ແລະບໍ່ຫ່ອນເກັບຫມາກອະງຸ່ນຈາກພຸ່ມມີຫນາມເຊັ່ນກັນ.
45ຄົນດີຍ່ອມເອົາຂອງດີທີ່ມີຢູ່ໃນຄັງດີໃນໃຈຂອງຕົນອອກມາ, ແລະຄົນຊົ່ວກໍຍ່ອມເອົາຂອງຊົ່ວຈາກຄັງຊົ່ວໃນໃຈຂອງຕົນອອກມາ. ເພາະ-
ວ່າໃຈເຕັມລົ້ນດ້ວຍອັນໃດ ປາກກໍເວົ້າອອກມາຢ່າງນັ້ນ.
46“ເຫດໃດທ່ານທັງຫລາຍຈຶ່ງເອີ້ນເຮົາວ່າ, ‘ອົງພຣະຜູ້ເປັນເຈົ້າ ອົງພຣະຜູ້ເປັນເຈົ້າ’ ແຕ່ທ່ານບໍ່ໄດ້ເຮັດຕາມຖ້ອຍຄຳທີ່ເຮົາບອກນັ້ນ.
47ທຸກຄົນທີ່ມາຫາເຮົາ ແລະຟັງຄຳຂອງເຮົາ ແລະປະຕິບັດຕາມເຮົາ, ເຮົາຈະແຈ້ງໃຫ້ທ່ານຮູ້ວ່າຄົນນັ້ນປຽບເຫມືອນຜູ້ໃດ.
48ເຂົາກໍປຽບເຫມືອນຄົນຜູ້ຫນຶ່ງທີ່ກໍ່ສ້າງເຮືອນ ຜູ້ນັ້ນຂຸດດິນລົງເລິກແລ້ວຕັ້ງຮາກເທິງດານຫີນ ແລະເມື່ອນ້ຳມາຖ້ວມແລ້ວກະແສນ້ຳໄຫລທັງໃສ່
ແຕ່ບໍ່ອາດຈະເຮັດໃຫ້ເຮືອນນັ້ນຫວັ່ນໄຫວ ເພາະວ່າໄດ້ສ້າງດີແລ້ວ.
49ແຕ່ຄົນທີ່ໄດ້ຍິນຖ້ອຍຄຳຂອງເຮົາແລະບໍ່ປະຕິບັດຕາມຖ້ອຍຄຳນັ້ນ, ກໍປຽບເຫມືອນຄົນຫນຶ່ງທີ່ໄດ້ກໍ່ສ້າງເຮືອນເທິງດິນທີ່ບໍ່ມີຮາກຖານ.
ເມື່ອກະແສນ້ຳໄຫລທັງໃສ່ເຮືອນນັ້ນ, ມັນກໍເຈື່ອນລົງທັນທີ, ແລະນຳຄວາມຈິບຫາຍມາສູ່ເຮືອນນັ້ນຈົນກ້ຽງບໍ່ເຫລືອຍັງເລີຍ.”

7 1ຫລັງຈາກທີ່ພຣະເຢຊູເຈົ້າຊົງກ່າວຄຳເຫລົ່ານັ້ນໃຫ້ປະຊາຊົນຟັງຫມົດແລ້ວ ພຣະອົງກໍສະເດັດເຂົ້າໄປໃນເມືອງກາເປນາອູມ.

2ມີຂ້ອຍໃຊ້ຂອງນາຍທະຫານໂຣມຄົນຫນຶ່ງທີ່ນາຍຮັກຫລາຍ ກຳລັງປ່ວຍຢູ່ແລະໃກ້ຈະຕາຍແລ້ວ. 3ເມື່ອນາຍ-
ທະຫານໄດ້ຍິນກ່ຽວກັບພຣະເຢຊູເຈົ້າ ເພິ່ນໄດ້ສົ່ງເຖົ້າແກ່ບາງຄົນຂອງພວກຢິວໄປຫາພຣະເຢຊູເຈົ້າ ເພື່ອເຊີນພຣະອົງສະ-
ເດັດມາຊ່ວຍຊີວິດຂ້ອຍໃຊ້ຂອງຕົນບໍ່ໃຫ້ຕາຍ. 4ເມື່ອພວກເຂົາເຂົ້າມາໃກ້ພຣະເຢຊູເຈົ້າແລ້ວ ເຂົາກໍອ້ອນວອນພຣະອົງດ້ວຍໃຈຮ້ອນຮົນວ່າ,
“ນາຍທະຫານຜູ້ນັ້ນສົມຄວນທີ່ຈະຮັບການຊ່ວຍເຫລືອນີ້ຈາກທ່ານ. 5ເພາະວ່າເພິ່ນຮັກປະເທດຊາດຂອງເຮົາ ແລະແມ່ນຜູ້ນີ້ແຫລະ,
ໄດ້ສ້າງໂຮງທັມະສາລາໃຫ້ແກ່ພວກເຮົາ.”
6ດັ່ງນັ້ນ ພຣະເຢຊູເຈົ້າຈຶ່ງສະເດັດໄປກັບພວກເຂົາ. ແຕ່ເມື່ອພຣະອົງໃກ້ຈະເຖິງບ້ານຂອງເຂົາແລ້ວ, ນາຍທະ-
ຫານໄດ້ໃຊ້ຫມູ່ສະຫາຍໄປຫາພຣະອົງທູນວ່າ, “ອົງພຣະຜູ້ເປັນເຈົ້າ, ຂໍຢ່າໄດ້ລຳບາກເລີຍ ເພາະວ່າຂ້ານ້ອຍເປັນຄົນບໍ່ສົມ-
ຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງຄາເຮືອນຂອງຂ້ານ້ອຍ. 7ເພາະເຫດນັ້ນຂ້ານ້ອຍຈຶ່ງຖືວ່າເປັນຜູ້ບໍ່ສົມຄວນທີ່ຈະໄປຫາພຣະອົງ,
ແຕ່ຂໍພຣະອົງພຽງແຕ່ກ່າວຄຳດຽວ ແລະຄົນໃຊ້ຂອງຂ້ານ້ອຍຄົງຈະດີພະຍາດ. 8ເພາະຂ້ານ້ອຍເປັນຄົນທີ່ຢູ່ໃຕ້ວິໄນທະຫານ
ແລະຂ້ານ້ອຍຍັງມີທະຫານຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍອີກ. ຄືຂ້ານ້ອຍສັ່ງຄົນນີ້ວ່າ ‘ໄປ’ ມັນກໍໄປ ສັ່ງອີກຄົນຫນຶ່ງວ່າ ‘ມາ’ ມັນກໍມາ
ແລະບອກແກ່ຂ້ອຍໃຊ້ຂອງຂ້ານ້ອຍວ່າ ‘ຈົ່ງເຮັດສິ່ງນີ້’ ມັນກໍເຮັດ.”
9ເມື່ອພຣະເຢຊູໄດ້ຍິນຄຳເຫລົ່ານັ້ນ ພຣະອົງກໍປະຫລາດໃຈໃນຕົວນາຍທະຫານນັ້ນ ແລະຫລຽວຫລັງກ່າວກັບປະຊາຊົນທີ່ຕາມມາວ່າ,
“ເຮົາບອກທ່ານທັງຫລາຍວ່າ ເຮົາຍັງບໍ່ເຄີຍເຫັນຜູ້ໃດມີຄວາມເຊື່ອໃຫຍ່ເທົ່ານີ້ໃນອິສະຣາ-
ເອນ.” 10ເມື່ອຄົນເຫລົ່ານັ້ນທີ່ຖືກສົ່ງກັບໄປເຖິງເຮືອນແລ້ວ ກໍພົບວ່າຂ້ອຍໃຊ້ຜູ້ນັ້ນດີພະຍາດເປັນປົກກະຕິແລ້ວ.
11ຫລັງຈາກນັ້ນບໍ່ດົນ ພຣະເຢຊູເຈົ້າກໍສະເດັດໄປຍັງເມືອງຫນຶ່ງຊື່ນາອີນ, ພວກສາວົກຂອງພຣະອົງ ພ້ອມກັບປະຊາ-
ຊົນຫລວງຫລາຍໄດ້ຕາມພຣະອົງໄປ. 12ເມື່ອສະເດັດມາໃກ້ປະຕູເມືອງແລ້ວ, ເບິ່ງແມ, ມີຄົນກຳລັງຫາມສົບຊາຍຫນຸ່ມຄົນຫນຶ່ງອອກມາ
ລາວເປັນລູກຊາຍຄົນດຽວຂອງແມ່ ຊຶ່ງເປັນແມ່ຫມ້າຍ, ແລະມີຊາວເມືອງຫລາຍສົມຄວນອອກມານຳນາງ. 13ເມື່ອເຫັນນາງແລ້ວ-
ອົງພຣະຜູ້ເປັນເຈົ້າກໍຊົງເມດຕານາງຫລາຍແລ້ວຊົງກ່າວວ່າ, “ຢ່າຮ້ອງໄຫ້.” 14ແລ້ວພຣະອົງສະ-
ເດັດເຂົ້າໄປໃກ້ແລະບາຍຂອບໄມ້ໂລງສົບທີ່ພວກເຂົາໃສ່ສົບໄວ້ ແລະຄົນທີ່ຫາມໂລງສົບນັ້ນກໍຢຸດຢືນຢູ່ ພຣະອົງຈຶ່ງສັ່ງວ່າ, “ຊາຍໜຸ່ມເອີຍ,
ເຮົາສັ່ງເຈົ້າວ່າ ຈົ່ງລຸກຂຶ້ນ.” 15ແລ້ວຄົນທີ່ຕາຍນັ້ນ ກໍລຸກຂຶ້ນນັ່ງແລະຕັ້ງຕົ້ນເວົ້າ ແລ້ວພຣະເຢຊູເຈົ້າຈຶ່ງຊົງມອບຊາຍນັ້ນໃຫ້ແມ່ຂອງລາວ.
16ແລ້ວພວກເຂົາທຸກຄົນຈຶ່ງເຕັມໄປດ້ວຍຄວາມຢ້ານພວກເຂົາຈຶ່ງສັນຣະເສີນພຣະເຈົ້າບໍ່ຢຸດໂດຍເວົ້າວ່າ, “ທ່ານຜູ້ປະກາດພຣະ-
ທັມຜູ້ຍິ່ງໃຫຍ່ໄດ້ເກີດຂຶ້ນທ່າມກາງພວກເຮົາ ແລ້ວແລະພຣະເຈົ້າໄດ້ສະເດັດມາຢ້ຽມຢາມພົນລະເມືອງຂອງພຣະ-
ອົງແລ້ວ.” 17ເລື່ອງຂອງພຣະອົງໄດ້ຊ່າລືໄປທົ່ວແຂວງຢູດາຍແລະທົ່ວຂົງເຂດທີ່ຢູ່ລ້ອມຮອບທັງໝົດ.
18ສາວົກຂອງໂຢຮັນກໍໄດ້ເລົ່າກ່ຽວກັບສິ່ງເຫລົ່ານີ້ທັງຫມົດ. 19ແລ້ວໂຢຮັນຈຶ່ງເອີ້ນສາວົກສອງຄົນມາແລະ ໃຊ້ເຂົາໄປຫາອົງພຣະຜູ້ເປັນ-
ເຈົ້າທູນຖາມວ່າ, "ທ່ານເປັນຜູ້ທີ່ຈະມານັ້ນຫລື? ຫລືວ່າເຮົາຕ້ອງລໍຄອຍອີກຄົນຫນຶ່ງອີກ." 20ເມື່ອພວກເຂົາທັງສອງໄດ້ມາໃກ້ພຣະເຢຊູຈຶ່ງທູນວ່າ,
"ໂຢຮັນບັບຕິສະໂຕ ໄດ້ໃຊ້ພວກຂ້ານ້ອຍມາຖາມວ່າ ‘ທ່ານເປັນຜູ້ທີ່ຈະມານັ້ນບໍ ຫລືຈະຕ້ອງລໍຄອຍຜູ້ອື່ນຕື່ມອີກ?'"
21ໃນເວລານັ້ນ ພຣະອົງໄດ້ຊົງໂຜດໃຫ້ຫລາຍຄົນດີພະຍາດໂຣຄາຕ່າງໆ ແລະຄວາມທຸກຍາກຕ່າງໆ ແລະພົ້ນຈາກວິນຍານຜີຮ້າຍ
ແລະພຣະອົງຮັກສາຄົນຕາບອດຫລາຍຄົນໃຫ້ເຫັນຮຸ່ງ, 22ພຣະເຢຊູຕອບສິດທັງສອງນັ້ນວ່າ, “ຈົ່ງໄປແຈ້ງແກ່ໂຢຮັນ
ຕາມທີ່ທ່ານໄດ້ເຫັນແລະໄດ້ຍິນ ຄືວ່າຄົນຕາບອດກໍເຫັນຮຸ່ງ, ຄົນຂາເສັ່ງກໍຍ່າງເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ, ຄົນຫູຫນວກກໍໄດ້ຍິນ,
ຄົນຕາຍແລ້ວກໍເປັນຄືນມາ, ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ. 23ຜູ້ໃດທີ່ບໍ່ລົ້ມເລີກຄວາມເຊື່ອໃນເຮົາ
ເນື່ອງຈາກສິ່ງທີ່ເຮົາກະທຳຜູ້ນັ້ນກໍເປັນສຸກ.”
24ຫລັງຈາກພວກຮັບໃຊ້ຂອງໂຢຮັນໄປແລ້ວ ພຣະເຢຊູເຈົ້າກໍຊົງຕັ້ງຕົ້ນກ່າວກັບປະຊາຊົນເຖິງເລື່ອງໂຢຮັນວ່າ, “ທ່ານທັງ-
ຫລາຍໄດ້ອອກໄປໃນຖິ່ນແຫ້ງແລ້ງກັນດານເພື່ອເບິ່ງຫຍັງ? ເພື່ອເບິ່ງຕົ້ນອໍ້ໄຫວໄປມາດ້ວຍລົມພັດຫລື? 25ແຕ່ທ່ານທັງຫລາຍອອກໄປເບິ່ງຫຍັງ?
ໄປເບິ່ງຄົນນຸ່ງຫົ່ມເຄື່ອງລະອຽດອ່ອນນວນຫລື? ເບິ່ງແມ, ຄົນທີ່ນຸ່ງຫົ່ມເຄື່ອງອັນງົດງາມ ແລະໃຊ້ຊີວິດຢ່າງຫລູຫລາຟຸມເຟືອຍຍ່ອມຢູ່ໃນຣາ-
ຊະວັງ. 26ແຕ່ພວກທ່ານອອກໄປເບິ່ງຫຍັງ? ເບິ່ງຜູ້ປະກາດພຣະທັມຫລື? ແມ່ນແລ້ວ ເຮົາບອກພວກທ່ານວ່າ ເປັນຍິ່ງກວ່າຜູ້ປະກາດພຣະທັມອີກ.
27ທ່ານຜູ້ນີ້ແຫລະທີ່ພຣະຄັມພີຂຽນໄວ້ເຖິງເພິ່ນວ່າ, ‘ເບິ່ງແມ, ເຮົາໃຊ້ຜູ້ຮັບໃຊ້ຂອງເຮົາໄປກ່ອນຫນ້າທ່ານ ຜູ້ທີ່ຈັດຕຽມຫົນ-
ທາງໄວ້ກ່ອນຫນ້າທ່ານ’. 28ເຮົາບອກພວກທ່ານວ່າ ໃນບັນດາຜູ້ທີ່ເກີດຈາກຜູ້ຍິງເຫລົ່ານັ້ນ ບໍ່ມີຜູ້ໃດໃຫຍ່ກວ່າໂຢຮັນ ແຕ່ຜູ້ນ້ອຍທີ່ສຸດໃນຣາ-
ຊະອານາຈັກຂອງພຣະເຈົ້າ ຍັງໃຫຍ່ກວ່າໂຢຮັນອີກ.”
29(ເມື່ອຄົນທັງປວງທີ່ໄດ້ຍິນດັ່ງນັ້ນ, ລວມເຖິງບັນດາຄົນເກັບພາສີ, ພວກເຂົາກໍໄດ້ຍອມຮັບວ່າພຣະເຈົ້າຊົງຍຸດຕິທັມ
ໂດຍທີ່ພວກເຂົາເປັນຫນຶ່ງໃນກຸ່ມຄົນທີ່ໄດ້ຮັບບັບຕິສະມາຈາກໂຢຮັນແລ້ວ. 30ແຕ່ພວກຟາຣີຊາຍ ແລະ ພວກທັມະຈານທີ່ບໍ່ໄດ້ຮັບບັບຕິສະ-
ມາຈາກໂຢຮັນ ໄດ້ຂັດຂວາງພຣະປະສົງຂອງພຣະເຈົ້າສຳລັບເຂົາ, ເພາະວ່າພວກເຂົາບໍ່ໄດ້ຮັບປະຕິສະມາໂດຍໂຢຮັນ.)
31“ແລ້ວເຮົາຄວນຈະປຽບທຽບຄົນສະໄຫມນີ້ໃສ່ກັບອັນໃດ? ພວກເຂົາເປັນເຫມືອນອັນໃດ? 32ພວກເຂົາເປັນເຫມືອນເດັກນ້ອຍທີ່ນັ່ງຢູ່ກາງຕະ-
ຫລາດຮ້ອງໃສ່ກັນແລະກັນວ່າ, ‘ພວກເຮົາໄດ້ເປົ່າປີ່ໃຫ້ພວກເຈົ້າ ແຕ່ພວກເຈົ້າບໍ່ໄດ້ຟ້ອນລຳເຮົາໄດ້ຮ້ອງໄຫ້ຮ່ຳໄຮ
ແຕ່ພວກເຈົ້າບໍ່ໄດ້ຕີເອິກຮ້ອງໃຫ້’.
33ເພາະວ່າໂຢຮັນບັບຕິສະໂຕ ໄດ້ມາໂດຍບໍ່ກິນເຂົ້າຈີ່ ຫລື ດື່ມເຫລົ້າແວງ ແລະ ພວກທ່ານເວົ້າວ່າ ‘ເພິ່ນມີຜີສິງຢູ່’. 34ສ່ວນບຸດມະນຸດໄດ້ມາທັງກິນ
ແລະດື່ມ ແລະພວກທ່ານເວົ້າວ່າ ‘ເບິ່ງແມ, ນີ້ເປັນຄົນກິນເກີນສ່ວນ ແລະ ມັກເມົາ, ເປັນເພື່ອນຂອງຄົນເກັບພາສີ ແລະ ຄົນບາບ’.
35ແຕ່ພຣະສະຕິປັນຍາ ກໍວ່າຖືກຕ້ອງແລ້ວ ໂດຍລູກທັງຫມົດຂອງນາງ.”
36ມີຄົນຫນຶ່ງໃນພວກຟາຣີຊາຍ ໄດ້ເຊີນພຣະເຢຊູເຈົ້າໄປຮັບປະທານອາຫານໃນເຮືອນຂອງຕົນ. ຫລັງຈາກທີ່ພຣະເຢຊູເຈົ້າສະ-
ເດັດເຂົ້າໄປໃນເຮືອນຂອງຟາຣີຊາຍແລ້ວພຣະອົງຊົງປຣະທັບລົງທີ່ໂຕະເພື່ອຈະຮັບປະທານອາຫານ. 37ເບິ່ງແມ,
ມີຍິງຄົນຫນຶ່ງໃນເມືອງນັ້ນຊຶ່ງເປັນຄົນບາບ. ເມື່ອນາງຮູ້ວ່າພຣະເຢຊູເຈົ້າຊົງນັ່ງຮັບປະທານອາຫານໃນເຮືອນຂອງຟາຣີຊາຍ


generated on Tue Jun 17 19:01:42 2025

ນາງໄດ້ຖືເຕົ້າຫີນຂາວມີນ້ຳຫອມລາຄາແພງມາ.[38]ນາງຢືນຂ້າງຫລັງໃກ້ຕີນຂອງພຣະອົງແລະຮ້ອງໄຫ້ ນ້ຳຕາໄຫລຈົນປຽກຕີນຂອງພຣະອົງ
ແລ້ວນາງເອົາຜົມເຊັດທັງຈູບຕີນຂອງພຣະອົງ ແລະເອົານ້ຳຫອມນັ້ນທາສີ່ງຕີນຂອງພຣະອົງ.
[39]ເມື່ອຟາຣີຊາຍຄົນທີ່ໄດ້ເຊີນພຣະເຢຊູມາໄດ້ເຫັນດັ່ງນັ້ນແລ້ວກໍນຶກໃນໃຈວ່າ “ຖ້າຜູ້ນີ້ແມ່ນຜູ້ປະກາດພຣະທັມ ເພິ່ນຄົງຈະໄດ້ຮູ້ວ່າຍິງຜູ້ຖືກ-
ຕ້ອງກາຍຂອງເພິ່ນເປັນຜູ້ໃດ ແລະເປັນຄົນແນວໃດ ເພາະມັນເປັນຄົນບາບ.”[40]ພຣະເຢຊູເຈົ້າຊົງຕອບເພິ່ນວ່າ, “ຊີໂມນເອີຍ,
ເຮົາມີບາງຢ່າງຈະເວົ້າກັບທ່ານ” ຊີໂມນທູນຕອບວ່າ, “ອາຈານເອີຍ, ເຊີນເວົ້າໂລດ!”
[41]ພຣະເຢຊູເຈົ້າຊົງກ່າວວ່າ, “ເຈົ້າຫນີ້ຜູ້ຫນຶ່ງມີລູກຫນີ້ສອງຄົນ. ຄົນຫນຶ່ງເປັນຫນີ້ເງິນຫ້າຮ້ອຍຫລຽນເດນາຣິອົນ
ແລະອີກຄົນຫນຶ່ງເປັນຫນີ້ຫ້າສິບຫລຽນເດນາຣິອົນ.[42]ເນື່ອງຈາກພວກເຂົາບໍ່ມີອັນໃດຈະໃຊ້ຫນີ້ແລ້ວ ເຈົ້າຫນີ້ຈຶ່ງໂຜດຍົກຫນີ້ໃຫ້ເຂົາທັງສອງ.
ໃນສອງຄົນນັ້ນຄົນໃດຈະຮັກເຈົ້າຫນີ້ຫລາຍກວ່າກັນ.”[43]ຊີໂມນທູນຕອບວ່າ, “ຂ້າ-
ນ້ອຍຄຶດວ່ານ່າຈະເປັນຄົນທີ່ເຈົ້າຫນີ້ຍົກຫນີ້ໃຫ້ຫລາຍນັ້ນເປັນຜູ້ຮັກຫລາຍທີ່ສຸດ” ພຣະເຢຊູເຈົ້າຊົງຕອບວ່າ, “ທ່ານຄຶດຖືກແລ້ວ.”
[44]ພຣະເຢຊູເຈົ້າຫລຽວໄປຫາຜູ້ຍິງຄົນນັ້ນແລະຊົງກ່າວກັບຊີໂມນວ່າ, “ທ່ານເຫັນຍິງຜູ້ນີ້ບໍ່. ເຮົາໄດ້ເຂົ້າມາໃນເຮືອນຂອງທ່ານ
ທ່ານບໍ່ໄດ້ໃຫ້ນ້ຳລ້າງຕີນຂອງເຮົາ, ແຕ່ຍິງຜູ້ນີ້ໄດ້ເອົານ້ຳຕາລ້າງຕີນຂອງເຮົາ ແລະໄດ້ເອົາຜົມຂອງຕົນເຊັດ.[45]ທ່ານບໍ່ໄດ້ຈູບເຮົາ, ແຕ່ຍິງຄົນນີ້ ຕັ້ງ-
ແຕ່ເຮົາເຂົ້າມາລາວບໍ່ໄດ້ເຊົາຈູບຕີນຂອງເຮົາ.
[46]ທ່ານບໍ່ໄດ້ທາຫົວຂອງເຮົາດ້ວຍນ້ຳມັນ ແຕ່ຍິງຜູ້ນີ້ໄດ້ທາຕີນຂອງເຮົາດ້ວຍນ້ຳມັນຫອມ.[47]ເຫດສັນ-
ນັ້ນເຮົາບອກທ່ານວ່າຄວາມຜິດບາບຂອງຍິງນີ້ຊຶ່ງມີຫລາຍນັ້ນ ແລະໄດ້ໂຜດຍົກຫລາຍກໍຮັກຫລາຍເຊັ່ນກັນ. ແຕ່ຜູ້ທີ່ໄດ້ຮັບການຍົກໂທດຫນ້ອຍ
ກໍຮັກຫນ້ອຍ.”
[48]ແລ້ວພຣະອົງຊົງກ່າວແກ່ນາງວ່າ, “ຄວາມຜິດບາບຂອງເຈົ້າໂຜດຍົກເສຍແລ້ວ.”[49]ຄົນທັງຫລາຍທີ່ນັ່ງຮັບປະທານອາຫານຮ່ວມກັບພຣະ-
ອົງກໍຕັ້ງຄຶດໃນໃຈວ່າ, “ຜູ້ນີ້ແມ່ນໃຜຈຶ່ງໃຫ້ອະພັຍຄວາມຜິດບາບໄດ້ ດັ່ງນັ້ນ,”[50]ແລ້ວພຣະເຢຊູເຈົ້າຈຶ່ງກ່າວກັບຍິງຄົນນັ້ນວ່າ,
“ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າພົ້ນແລ້ວຈົ່ງໄປເປັນສຸກເຖີ້ນ.”

8 1ຫລັງຈາກນັ້ນ ພຣະເຢຊູເຈົ້າໄດ້ສະເດັດໄປຕາມບ້ານແລະຕາມເມືອງ, ຊົງເທດສະນາ ແລະ ປະກາດຂ່າວປະເສີດເລື່ອງຣາຊະອານາ-
ຈັກຂອງພຣະເຈົ້າ ແລະສາວົກສິບສອງຄົນນັ້ນກໍຢູ່ກັບພຣະອົງ. 2ພ້ອມກັບແມ່ຍິງບາງຄົນທີ່ຊົງໂຜດໃຫ້ພົ້ນຈາກຜີມານຮ້າຍແລ້ວ
ແລະພົ້ນຈາກພະຍາດຕ່າງໆ ຄືມາຣີອາຜູ້ມີຊື່ອີກວ່າມັກດາລາ ຜູ້ທີ່ພຣະອົງຊົງຂັບໄລ່ຜີເຈັດໂຕອອກ. 3ນາງໂຢຮັນນາພັນຣະຍາຂອງຈູຊາ
ຜູ້ເປັນກົມມະວັງຂອງເຮໂຣດ, ແລະນາງຊູຊັນນາແລະຍິງຄົນອື່ນໆອີກຫລາຍຄົນທີ່ໄດ້ຈັດຕຽມສິ່ງຂອງໃຫ້ພວກເຂົາ ດ້ວຍຊັບສິນຂອງພວກນາງ.

4ເມື່ອປະຊາຊົນຈຳນວນຫລວງຫລາຍໄດ້ມາຊຸມນຸມກັນຢູ່ ລວມທັງຜູ້ຄົນທີ່ມາຈາກເມືອງຕ່າງໆ ພາກັນມາຫາພຣະອົງ, ພຣະ-
ອົງຈຶ່ງຊົງກ່າວກັບເຂົາເປັນຄຳອຸປະມາວ່າ, 5"ມີຜູ້ຫວ່ານພືດຄົນຫນຶ່ງອອກໄປຫວ່ານເມັດພືດຂອງຕົນ, ເມື່ອກຳລັງຫວ່ານຢູ່ນັ້ນ
ລາງເມັດກໍຕົກຕາມທາງກໍຖືກຢຽບຢໍ່າ ແລະນົກປ່າມາກິນເສຍ. 6ລາງເມັດກໍຕົກໃສ່ບ່ອນມີຫີນ
ແລະເມື່ອງອກຂຶ້ນແລ້ວກໍຫ່ຽວແຫ້ງລົງເພາະບ່ອນບໍ່ຊຸ່ມ.
7ລາງເມັດກໍຕົກກາງພຸ່ມຫນາມ ແລະຫນາມກໍປົ່ງຂຶ້ນມານຳກັບເມັດເຂົ້ານັ້ນ ແລະປົກຫຸ້ມຮັດມັນເສັຍ.
8ແຕ່ມີບາງເມັດກໍຕົກໃສ່ດິນດີຈຶ່ງງອກຂຶ້ນເກີດຜົນໄດ້ຮ້ອຍຕໍ່" ຫລັງຈາກທີ່ພຣະເຢຊູເຈົ້າຊົງກ່າວດັ່ງນີ້ແລ້ວ ພຣະອົງຈຶ່ງຊົງຮ້ອງຂຶ້ນວ່າ,
"ຜູ້ໃດມີຫູທີ່ໄດ້ຍິນ ຈົ່ງຟັງເຖີດ."
9ຫລັງຈາກນັ້ນ ພວກສາວົກຂອງພຣະອົງຈຶ່ງທູນຖາມພຣະອົງເຖິງຄວາມຫມາຍຂອງຄຳອຸປະມານີ້. 10ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ,
"ທ່ານທັງຫລາຍໄດ້ຮັບສິດພິເສດທີ່ຈະເຂົ້າໃຈຂໍ້ຄວາມລັບເລິກແຫ່ງຣາຊະອານາຈັກຂອງພຣະເຈົ້າ ແຕ່ສຳ-
ລັບຄົນອື່ນເປັນພຽງແຕ່ຄຳສອນດ້ວຍຄຳອຸປະມາເທົ່ານັ້ນ ພວກເຂົາເບິ່ງແຕ່ຈະບໍ່ເຫັນ, ແລະເມື່ອເຂົາຟັງຈະບໍ່ເຂົ້າໃຈ."
11ບັດນີ້ ຄື "ຄວາມຫມາຍຂອງຄຳອຸປະມາເມັດພືດນັ້ນໄດ້ ແກ່ພຣະທັມຂອງພຣະເຈົ້າ. 12ເມັດທີ່ຕົກຕາມທາງໄດ້ແກ່ພວກຄົນທີ່ໄດ້ຍິນພຣະຄັມນັ້ນ
ແຕ່ມານຮ້າຍມາແລະຍາດເອົາພຣະທັມໄປຈາກໃຈຂອງພວກເຂົາ, ເພື່ອບໍ່ໃຫ້ເຊື່ອແລະບໍ່ໄດ້ຄວາມລອດພົ້ນ. 13ແລ້ວກໍຮັບພຣະ-
ທັມນັ້ນດ້ວຍຄວາມຍິນດີແຕ່ບໍ່ມີຮາກ; ເຊື່ອຢູ່ແຕ່ຊົ່ວຄາວເມື່ອຖືກທົດລອງເຂົາເລີກໄປ.
14ເມັດທີ່ຕົກທ່າມກາງພຸ່ມຫນາມນັ້ນໄດ້ແກ່ພວກຄົນທີ່ໄດ້ຍິນພຣະທັມແລ້ວ ແຕ່ຍັງດຳເນີນຊີວິດໃນທາງຂອງຕົນເອງ,
ພວກເຂົາຖືກປົກຄຸມດ້ວຍຄວາມກັງວົນ, ຄວາມຮັ່ງມີແລະ ຄວາມສະຫນຸກຂອງຊີວິດນີ້ ດັ່ງນັ້ນ ພວກເຂົາຈຶ່ງບໍ່ເກີດຜົນຢ່າງທີ່ພວກເຂົາຈະເປັນ.
15ແຕ່ເມັດທີ່ຕົກໃສ່ດິນດີນັ້ນໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມດ້ວຍໃຈເຫລື້ອມໃສສັດທາ ແລ້ວກໍຍຶດໄວ້ຢ່າງຫມັ້ນຄົງ ແລະ ເກີດຜົນດ້ວຍຄວາມພາກ-
ພຽນ."
16ບໍ່ມີຜູ້ໃດ ເມື່ອໄຕ້ຕະກຽງແລ້ວຈະເອົາກະບຸງປົກບັງໄວ້ ຫລື ວາງໄວ້ໄຕ້ຕຽງນອນ. ແຕ່ເຂົາຈະຕັ້ງໄວ້ເທິງເຊີງຫຽນ
ເພື່ອທຸກຄົນທີ່ເຂົ້າມາຈະໄດ້ເຫັນແສງສະຫວ່າງ. 17ເພາະບໍ່ມີສິ່ງໃດທີ່ເຊື່ອງໄວ້ ຈະບໍ່ປະກົດໃຫ້ເຫັນ ຫລື ສິ່ງໃດທີ່ປົກບັງໄວ້ເປັນຄວາມລັບ
ຈະບໍ່ຖືກຮັບຮູ້ ແລະ ຖືກເປີດເຜີຍໃນທີ່ແຈ້ງ. 18ດັ່ງນັ້ນ ຈົ່ງຟັງໃຫ້ດີຣະວັງໃຫ້ດີ
ດ້ວຍວ່າຜູ້ໃດມີຢູ່ແລ້ວຈະຊົງເພີ່ມເຕີມໃຫ້ແກ່ຜູ້ນັ້ນອີກແຕ່ຜູ້ໃດທີ່ບໍ່ມີ ຈະຊົງຖືກຍຶກເອົາໄປຈາກຜູ້ນັ້ນເສຍ ເຖິງແມ່ນວ່າສິ່ງທີ່ເຂົາຄຶດວ່າມີຢູ່ນັ້ນ"
19ຫລັງຈາກນັ້ນແມ່ແລະພວກນ້ອງຊາຍຂອງພຣະເຢຊູເຈົ້າໄດ້ມາຫາພຣະອົງ ແຕ່ພວກເຂົາບໍ່ສາມາດເຂົ້າໃກ້ພຣະອົງໄດ້ເພາະຄົນຫລາຍ.
20ມີຄົນໄປບອກພຣະເຢຊູເຈົ້າວ່າ, "ແມ່ແລະພວກນ້ອງຊາຍທ່ານຢືນຢູ່ຂ້າງນອກຢາກມາຫາ." 21ແຕ່ພຣະເຢຊູເຈົ້າຕອບພວກເຂົາວ່າ,
"ແມ່ແລະນ້ອງຂອງເຮົາຄືຄົນທີ່ໄດ້ຍິນພຣະທັມຂອງພຣະເຈົ້າແລະເຮັດຕາມ.
22ວັນຫນຶ່ງ ພຣະເຢຊູເຈົ້າແລະສາວົກຂອງພຣະອົງໄດ້ສະເດັດລົງເຮືອໄປ ພຣະອົງໄດ້ກ່າວກັບເຂົາວ່າ, "ໃຫ້ພວກເຮົາພາ-
ກັນຂ້າມໄປຟາກຫນຶ່ງຂອງທະເລສາບເທາະ" ແລ້ວເຂົາກໍຖອຍເຮືອອອກໄປ. 23ຂະນະທີ່ພວກເຂົາກຳລັງຂ້າມໄປພຣະເຢຊູເຈົ້າກໍນອນຫລັບຢູ່
ແລະເກີດມີລົມພະຍຸພັດລົງມາກາງທະເລຢ່າງຮຸນແຮງ ແລະນ້ຳກໍເລີ່ມເຂົ້າເຮືອ ແລະພວກເຂົາກໍຕົກຢູ່ໃນອັນຕະຣາຍ.
24ຈາກນັ້ນ ພວກສາວົກຈຶ່ງເຂົ້າໄປຫາພຣະອົງ ແລະປຸກພຣະອົງໃຫ້ຕື່ນຂຶ້ນ ແລະທູນວ່າ, "ທ່ານອາຈານ, ທ່ານອາ-
ຈານເຈົ້າເອີຍ, ພວກຂ້ານ້ອຍກຳລັງຈະຕາຍຢູ່ແລ້ວ" ພຣະອົງຈຶ່ງຊົງຕື່ນຂຶ້ນຫ້າມລົມແລະຟອງນ້ຳ, ລົມແລະຟອງນ້ຳກໍຢຸດສະ-
ຫງົບງຽບທົ່ວໄປທັນທີ. 25ພຣະອົງຊົງກ່າວກັບເຂົາວ່າ, "ຄວາມເຊື່ອຂອງພວກທ່ານຢູ່ໃສ?" ເຂົາກໍຢ້ານແລະປະຫລາດໃຈຈຶ່ງເວົ້າກັນວ່າ,
"ທ່ານຜູ້ນີ້ແມ່ນຜູ້ໃດຫນໍ ຈຶ່ງຫ້າມທັງລົມແລະນ້ຳ ແລະລົມກັບນ້ຳກໍຍອມຟັງເພິ່ນ?"
26ແລ້ວ ພວກເພິ່ນໄດ້ຂີ່ເຮືອມາຈອດທີ່ເຂດແດນຂອງຊາວເຄຣາເຊນ ຊຶ່ງຢູ່ກົງກັນຂ້າມກັບແຂວງຄາລີເລ. 27ເມື່ອພຣະເຢຊູເຈົ້າສະ-
ເດັດຂຶ້ນບົກແລ້ວມີຊາຍຄົນຫນຶ່ງຈາກໃນເມືອງນັ້ນມາພົບພຣະອົງ ຊາຍຜູ້ນີ້ມີຜີມານຮ້າຍຫລາຍໂຕສິງຢູ່ ລາວບໍ່ໄດ້ນຸ່ງເຄື່ອງເປັນເວລານານແລ້ວ
ເຂົາບໍ່ໄດ້ອາໄສຢູ່ໃນເຮືອນ ແຕ່ຢູ່ຕາມອຸບໂມງຝັງສົບ.
28ເມື່ອຄົນນັ້ນໄດ້ເຫັນພຣະເຢຊູເຈົ້າກໍຮ້ອງຂຶ້ນ ແລະຂາບລົງຕໍ່ຫນ້າພຣະອົງ ລາວກ່າວດ້ວຍສຽງດັງທູນວ່າ. "ເຮົາໄດ້ເຮັດອັນໃດໃຫ້ທ່ານຫລື ເຢ-
ຊູບຸດຂອງພຣະເຈົ້າຜູ້ສູງສຸດເອີຍ? ຂໍຢ່າໄດ້ທໍຣະມານເຮົາຖ້ອນ!" 29ເນື່ອງຈາກພຣະເຢຊູເຈົ້າໄດ້ຊົງສັ່ງຜີຖ່ອຍຮ້າຍໃຫ້ອອກຈາກຊາຍຄົນນັ້ນ.
ເພາະວ່າມັນໄດ້ມາກຸມເອົາຄົນນັ້ນໄປຫລາຍເທື່ອ ແມ່ນວ່າຈະຖືກລ່າມໂສ້ຂັງໄວ້ ແລະເຄີຍຖືກມັດດ້ວຍເຊືອກ
ແຕ່ມັນກໍຫັກເຄື່ອງມັດນັ້ນເສຍແລ້ວໄດ້ບັງຄັບໃຫ້ເຂົ້າໄປໃນປ່າ.
30ຝ່າຍພຣະເຢຊູເຈົ້າຖາມມັນວ່າ, "ມຶງຊື່ຫຍັງ?" ມັນທູນຕອບວ່າ, "ຊື່ກອງທັບ" ດ້ວຍວ່າຜີທີ່ເຂົ້າສິງຢູ່ນັ້ນມີຫລາຍໂຕ. 31ແລະພວກມັນໄດ້ອ້ອນ-
ວອນຂໍນຳພຣະອົງບໍ່ໃຫ້ບັງຄັບມັນຫນີໄປສູ່ຂຸມນະຣົກ.
32ຂະນະນັ້ນ ມີຫມູຝູງໃຫຍ່ກຳລັງຫາກິນຢູ່ຕາມພູ ຜີເຫລົ່ານັ້ນໄດ້ທູນຂໍພຣະອົງຊົງອະນຸຍາດໃຫ້ພວກມັນເຂົ້າສິງຢູ່ໃນຫມູຝູງນັ້ນ ພຣະ-
ອົງກໍຊົງອະນຸຍາດໃຫ້. 33ດັ່ງນັ້ນພວກມັນຈຶ່ງໄດ້ອອກມາຈາກຊາຍຄົນນັ້ນແລ້ວເຂົ້າໄປສິງຢູ່ໃນຝູງຫມູ, ແລະ ທັງຫມົດກໍແລ່ນລົງຈາກຕາຫລິ່ງຊັນ
ໂຕນໃສ່ທະເລສາບ ແລະ ຈົມນ້ຳຕາຍ.
34ເມື່ອຄົນລ້ຽງຫມູໄດ້ເຫັນເຫດການທີ່ເກີດຂຶ້ນນັ້ນ ພວກເຂົາແລ່ນໄປເລົ່າເລື່ອງນັ້ນທັງໃນເມືອງແລະນອກເມືອງ.
35ແລ້ວຄົນທັງປວງກໍອອກມາເບິ່ງເຫດການທີ່ເກີດຂຶ້ນນັ້ນ ແລະ ເມື່ອມາຫາພຣະເຢຊູເຈົ້າ
ພວກເຂົາໄດ້ເຫັນຊາຍຄົນທີ່ຜີຮ້າຍອອກຈາກຕົວນຸ່ງຫົ່ມເສື້ອຜ້າ ແລະ ມີສະຕິ ນັ່ງຢູ່ໃກ້ພຣະບາດພຣະເຢຊູເຈົ້າພວກເຂົາຈຶ່ງມີໃຈຢ້ານ.

 generated on Tue Jun 17 19:01:42 2025

[36]ຈາກນັ້ນ ຜູ້ທີ່ເຫັນເຫດການນັ້ນ ກໍພາກັນເລົ່າເຖິງເຫດການຄົນທີ່ຜີມານຮ້າຍເຂົ້າສິງນັ້ນໄດ້ໂຜດໃຫ້ດີປົກກະຕິຢ່າງໃດ.[37]ຜູ້ຄົນທີ່ຢູ່ໃນເມືອງເຄ-
ຣາເຊນກັບປະຊາຊົນທັງປວງໃນທົ່ວຮອບເຂດນັ້ນໄດ້ຂໍຮ້ອງໃຫ້ພຣະອົງຫນີໄປຈາກເຂົາເສັຍ ເພາະຄວາມຢ້ານອັນໃຫຍ່ໄດ້ຕົກໃສ່ເຂົາ ພຣະ-
ອົງຈຶ່ງສະເດັດລົງເຮືອກັບຄືນໄປ.
[38]ຊາຍທີ່ມີຜີມານຮ້າຍອອກຈາກຕົວນັ້ນໄດ້ຂໍຮ້ອງພຣະເຢຊູເຈົ້າອະນຸຍາດໃຫ້ເຂົາຕິດຕາມພຣະອົງໄປດ້ວຍ ແຕ່ພຣະ-
ເຢຊູເຈົ້າບອກໃຫ້ລາວກັບຄືນໄປໂດຍຊົງສັ່ງວ່າ.[39]“ຈົ່ງກັບໄປບ້ານເຮືອນຂອງເຈົ້າ ແລະເລົ່າສິ່ງດີທຸກຢ່າງທີ່ພຣະເຈົ້າໄດ້ຊົງກະທຳແກ່ເຈົ້ານັ້ນ”
ແລ້ວຊາຍຄົນນັ້ນກໍກັບໄປແລະປະກາດສິ່ງອັນຍິ່ງໃຫຍ່ທີ່ພຣະເຢຊູເຈົ້າໄດ້ຊົງກະທຳແກ່ຕົນຕະຫລອດທົ່ວທັງເມືອງ.
[40]ເມື່ອພຣະເຢຊູເຈົ້າສະເດັດກັບມາ ປະຊາຊົນກໍໄດ້ຕ້ອນຮັບພຣະອົງ ເພາະພວກເຂົາລໍຄອຍຖ້າພຣະອົງຢູ່.[41]ແລະເບິ່ງແມ, ມີຊາຍຄົນຫນຶ່ງຊື່ຢາ-
ອີໂຣ ເປັນຫົວຫນ້າໂຮງທັມມະສາລາ ມາຂາບລົງທີ່ຕີນຂອງພຣະເຢຊູເຈົ້າ ອ້ອນວອນຂໍໃຫ້ພຣະອົງສະເດັດເຂົ້າໄປໃນເຮືອນຂອງຕົນ.[42]ເພາະ-
ລູກສາວຄົນດຽວຂອງລາວອາຍຸສິບສອງປີປ່ວຍກຳລັງຈະຕາຍ. ແຕ່ຝູງປະຊາຊົນພາກັນບຽດພຣະອົງຂະນະທີ່ພຣະອົງກຳລັງສະເດັດໄປ.
[43]ຍິງຄົນຫນຶ່ງເປັນພະຍາດເລືອດຕົກໄດ້ສິບສອງປີມາແລ້ວ ແລະນາງໄດ້ຈ່າຍຊັບຂອງຕົນໄປກັບການຮັກສາ ແຕ່ບໍ່ມີຫມໍຄົນໃດຮັກສາໃຫ້ດີພະ-
ຍາດໄດ້.[44]ນາງໄດ້ຫຍັບເຂົ້າມາເບື້ອງຫລັງພຣະເຢຊູ ແລະບາຍແຄມເຄື່ອງທົ່ງຂອງພຣະອົງ ໃນທັນໃດນັ້ນເລືອດກໍເຊົາໄຫລ.
[45]ພຣະເຢຊູຊົງຖາມວ່າ, “ແມ່ນໃຜໄດ້ບາຍເຮົາ?” ເມື່ອຄົນທັງປວງໄດ້ຕອບປະຕິເສດ ເປໂຕ ໄດ້ທູນວ່າ, “ອາຈານເຈົ້າເອີຍ, ກໍແມ່ນປະຊາ-
ຊົນທີ່ກຳລັງກີດຂວາງແລະບຽດທ່ານຢູ່.”[46]ແຕ່ພຣະເຢຊູຊົງຕອບວ່າ, “ມີບາງຄົນໄດ້ບາຍເຮົາ
ເພາະເຮົາຮູ້ສຶກວ່າຣິດອຳນາດໄດ້ແຜ່ຊ່ານອອກຈາກເຮົາໄປ.”
[47]ເມື່ອຍິງນັ້ນເຫັນວ່າຈະເຊື່ອງຕົວຈາກການກະທຳຂອງຕົນເອງບໍ່ໄດ້ແລ້ວ, ນາງກໍເຂົ້າມາດ້ວຍຕົວສັ່ນຂາບລົງຕໍ່ພຣະພັກຂອງພຣະເຢຊູເຈົ້າຕໍ່-
ໜ້າຄົນທັງປວງ. ນາງໄດ້ທູນເຖິງເຫດການທີ່ຕົນໄດ້ບາຍພຣະອົງ ແລະບອກເຖິງເລື່ອງທີ່ຕົນໄດ້ດີພະຍາດທັນທີ.[48]ພຣະເຢຊູເຈົ້າກ່າວກັບນາງວ່າ,
“ລູກຍິງເອີຍ, ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ. ຈົ່ງໄປເປັນສຸກເທີ້ນ”.
[49]ໃນຂະນະທີ່ພຣະເຢຊູເຈົ້າກ່າວຢູ່ນັ້ນ ມີຄົນຫນຶ່ງມາແຕ່ເຮືອນຂອງນາຍໂຮງທັມມະສາລາບອກວ່າ, “ລູກສາວຂອງທ່ານຕາຍແລ້ວ
ຂໍຢ່າໄດ້ລົບກວນອາຈານຕໍ່ໄປເລີຍ.”[50]ແຕ່ເມື່ອພຣະເຢຊູເຈົ້າໄດ້ຍິນເຊັ່ນນັ້ນກໍຊົງກ່າວແກ່ນາຍນັ້ນວ່າ, “ຢ່າວິຕົກເທາະ ຈົ່ງເຊື່ອເທົ່ານັ້ນ;
ແລ້ວລູກທ່ານຈະໄດ້ລອດ.”
[51]ເມື່ອສະເດັດເຖິງເຮືອນຂອງນາຍໂຮງທັມມະສາລາແລ້ວ ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ຜູ້ໃດເຂົ້າໄປນຳ ເວັ້ນແຕ່ເປໂຕ, ໂຢຮັນ, ຢາໂກໂບ,
ແລະພໍ່ແມ່ຂອງເດັກນ້ອຍນັ້ນ.[52]ຄົນທັງຫລາຍກໍຕີອົກຮ້ອງໄຫ້ຮໍ່າໄຮເພາະເດັກນ້ອຍນັ້ນ, ແຕ່ພຣະອົງຊົງບອກວ່າ, “ຢ່າຮ້ອງໄຫ້ເທາະ ເດັກ-
ນ້ອຍນັ້ນບໍ່ຕາຍດອກ, ພຽງແຕ່ຫລັບຢູ່ເທົ່ານັ້ນ.”[53]ແຕ່ພວກເຂົາພາກັນຫົວຂວັນພຣະອົງ ເພາະເຂົາຮູ້ວ່າເດັກນ້ອຍນັ້ນຕາຍແລ້ວ.
[54]ແຕ່ພຣະເຢຊູເຈົ້າຈັບມືເດັກນ້ອຍ ແລ້ວຊົງຮ້ອງອອກມາວ່າ, “ລູກເອີຍ, ຈົ່ງລຸກຂຶ້ນ”.[55]ແລ້ວຈິດວິນຍານກໍກັບເຂົ້າໃນຕົວເດັກນ້ອຍນັ້ນ,
ແລະລາວໄດ້ລຸກຂຶ້ນທັນທີ. ພຣະອົງຈຶ່ງຊົງສັ່ງໃຫ້ເອົາອາຫານມາໃຫ້ລາວກິນ.[56]ຝ່າຍພໍ່ແມ່ຂອງເດັກນ້ອຍນັ້ນກໍງຶດອັດ-
ສະຈັນໃຈຫລາຍ, ແຕ່ພຣະອົງຊົງຫ້າມເຂົາບໍ່ໃຫ້ບອກຜູ້ໃດຮູ້ເຫດການຊຶ່ງເປັນມານັ້ນ.


generated on Tue Jun 17 19:01:42 2025

9 [1]ເມື່ອພຣະເຢຊູເຈົ້າເອີ້ນສາວົກສິບສອງຄົນນັ້ນມາພ້ອມກັນແລ້ວ ກໍຊົງປະທານໃຫ້ເຂົາມີຣິດເດດແລະມີສິດອຳນາດເຫນືອຜີມານຮ້າຍທັງປວງ
ແລະເພື່ອຈະໄດ້ເຮັດໃຫ້ການດີພະຍາດຕ່າງໆຂອງພວກເຂົາ.[2]ພຣະອົງຊົງໃຊ້ເຂົາໃຫ້ອອກໄປປະກາດຣາຊະອານາຈັກຂອງພຣະເຈົ້າ
ແລະເຮັດໃຫ້ຄົນເຈັບໄຂ້ໄດ້ປ່ວຍດີພະຍາດ.

[3]ພຣະອົງຈຶ່ງຊົງສັ່ງເຂົາວ່າ, "ເມື່ອຈະເດີນທາງນັ້ນ - ຢ່າເອົາສິ່ງໃດໄປ ບໍ່ວ່າຈະເປັນໄມ້ຄ້ອນເທົ້າ, ຫລືຖົງ, ຫລືອາຫານ, ຫລື ເງິນ, ຫລື
ເສື້ອສອງໂຕ.[4]ເມື່ອພວກທ່ານເຂົ້າໄປໃນເຮືອນຫລັງໃດ ກໍໃຫ້ອາໄສຢູ່ໃນເຮືອນຫລັງນັ້ນຈົນກວ່າຈະຈາກໄປ.
[5]ຖ້າຜູ້ໃດບໍ່ຕ້ອນຮັບພວກທ່ານ ເມື່ອທ່ານອອກຈາກເມືອງນັ້ນໄປ ແລະຈົ່ງສັນຂີ້ຝຸ່ນທີ່ຕິດຕີນຂອງພວກທ່ານອອກເສັຍ ເພື່ອເປັນພະ-
ຍານຕໍ່ພວກເຂົາວ່າທ່ານໄດ້ຕໍ່ຕ້ານພວກເຂົາ."[6]ຫລັງຈາກນັ້ນ ພວກສາວົກກໍພາກັນອອກໄປ ຕາມບ້ານເມືອງຕ່າງໆ ເພື່ອປະກາດຂ່າວປະເສີດ
ແລະໄດ້ຮັກສາພະຍາດໃຫ້ຄົນເຈັບປ່ວຍທົ່ວທຸກບ່ອນດີພະຍາດ.
[7]ໃນເວລານັ້ນ ເຮໂຣດຜູ້ປົກຄອງໄດ້ຍິນເລື່ອງເຫດການທັງປວງຊຶ່ງເກີດຂຶ້ນນັ້ນ ຈຶ່ງເກີດຄວາມກະວົນກະວາຍໃຈ ເພາະບາງຄົນເວົ້າວ່າ, "ໂຢ-
ຮັນບັບຕິສະໂຕເປັນຄືນມາຈາກຕາຍແລ້ວ."[8]ລາງຄົນວ່າ, "ເປັນເອລີຢາມາປະກົດ" ແຕ່ຄົນອື່ນກໍວ່າ, "ເປັນຜູ້ປະກາດພຣະທັມແຕ່ບູ-
ຮານກັບເປັນຄືນມາແລະມີຊີວິດອີກ."[9]ເຮໂຣດຈຶ່ງກ່າວວ່າ, "ໂຢຮັນນັ້ນເຮົາໄດ້ຕັດຫົວແລ້ວ ແຕ່ຄົນຜູ້ທີ່ເຮົາໄດ້ຍິນຂ່າວນີ້ແມ່ນຜູ້ໃດຫນໍ?"
ແລ້ວເຮໂຣດຈຶ່ງໄດ້ຫາໂອກາດທີ່ຈະໄປພົບພຣະເຢຊູເຈົ້າ.
[10]ເມື່ອອັກຄະສາວົກທີ່ຖືກສົ່ງອອກໄປນັ້ນກັບຄືນມາລາຍງານໃນສິ່ງທີ່ພວກເຂົາໄດ້ເຮັດນັ້ນ. ແລ້ວພຣະອົງຊົງພາພວກເພິ່ນອອກໄປເຖິງເມືອງຫນຶ່ງ
ຊື່ເບັດສາອີດາ.[11]ແຕ່ເມື່ອປະຊາຊົນຮູ້ຈັກ ເຂົາກໍຕາມໄປຫາພຣະອົງ ແລະພຣະອົງກໍຊົງຕ້ອນຮັບພວກເຂົາ ແລະຊົງບອກເຂົາເຖິງຣາ-
ຊະອານາຈັກຂອງເຈົ້າ ແລະພຣະອົງກໍຊົງໂຜດຮັກສາພະຍາດໃຫ້ກັບບັນດາຄົນເຫລົ່ານັ້ນທີ່ຕ້ອງການເຊົາປ່ວຍ.
[12]ໃນເວລາໃກ້ຄ່ຳ ສາວົກສິບສອງຄົນນັ້ນໄດ້ມາທູນພຣະອົງວ່າ, "ຂໍໃຫ້ປະຊາຊົນເລີກໄປຕາມບ້ານແລະເມືອງໃນແຖບນີ້
ເພື່ອຫາບ່ອນພັກນອນແລະຊື້ອາຫານກິນ ເພາະບ່ອນນີ້ຢູ່ກາງປ່າ."[13]ແຕ່ພຣະອົງຊົງຕອບເຂົາວ່າ, "ພວກທ່ານຈົ່ງລ້ຽງເຂົາສາ!" ພວກສາ-
ວົກຈຶ່ງທູນວ່າ, "ພວກຂ້ານ້ອຍບໍ່ມີຫຍັງນອກຈາກເຂົ້າຈີ່ຫ້າກ້ອນແລະປາສອງໂຕເທົ່ານັ້ນ ເວັ້ນແຕ່ພວກຂ້ານ້ອຍຈະໄປຊື້ອາຫານສຳ-
ລັບຄົນທັງຫມົດນີ້."[14]ເພາະວ່າຄົນເຫລົ່ານັ້ນມີຜູ້ຊາຍປະມານຫ້າພັນຄົນ ແລ້ວພຣະເຢຊູເຈົ້າສັ່ງພວກສາວົກວ່າ, "ຈົ່ງໃຫ້ພວກເຂົານັ່ງລົງເປັນຫມູ່
ໆ ລະຫ້າສິບຄົນ."
[15]ດັ່ງນັ້ນ ພວກເຂົາກໍເຮັດຕາມ ແລະຈັດໃຫ້ປະຊາຊົນທັງຫມົດນັ່ງລົງ.[16]ສ່ວນພຣະອົງຊົງຮັບເອົາເຂົ້າຈີ່ຫ້າກ້ອນແລະປາສອງໂຕນັ້ນ-
ແລ້ວກໍຊົງເງີຍຫນ້າຂຶ້ນຟ້າ ແລະຂໍພຣະພອນສຳລັບອາຫານນັ້ນ ແລ້ວຊົງຫັກເຂົ້າຈີ່ນັ້ນຍື່ນໃຫ້ພວກສາວົກເພື່ອແຈກໃຫ້ແກ່ປະຊາຊົນ.
[17]ພວກເຂົາກໍກິນອີ່ມທຸກຄົນ ແລະເກັບເສດສ່ວນຕ່ອນຫັກທີ່ເຫລືອນັ້ນກໍເກັບໄດ້ສິບສອງບຸງ.
[18]ຢູ່ມາມື້ຫນຶ່ງ ຂະນະທີ່ພຣະເຢຊູເຈົ້າກຳລັງອະທິຖານຢູ່ໃນບ່ອນຕ່າງຫາກ ມີແຕ່ພວກສາວົກຢູ່ນຳພຣະອົງແລະພຣະອົງຊົງຖາມພວກເຂົາວ່າ,
"ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?".[19]ພວກສາວົກທູນຕອບວ່າ, "ເຂົາວ່າແມ່ນໂຢຮັນບັບຕິສະໂຕ, ແຕ່ລາງຄົນວ່າແມ່ນເອລີຢາ,
ແຕ່ຄົນອື່ນວ່າແມ່ນຜູ້ປະກາດພຣະທັມແຕ່ບູຮານກັບເປັນຄືນມາອີກຄັ້ງຫນຶ່ງ."
[20]ພຣະອົງຖາມພວກເຂົາວ່າ, "ແຕ່ພວກທ່ານເດຄິດວ່າເຮົາແມ່ນໃຜ?" ເປໂຕທູນຕອບວ່າ, "ແມ່ນພຣະຄຣິດມາແຕ່ພຣະ-
ເຈົ້າ."[21]ແຕ່ພຣະເຢຊູເຈົ້າສັ່ງຫ້າມເຂົາຢ່າງແຂງແຮງ ບໍ່ໃຫ້ບອກສິ່ງນີ້ແກ່ຜູ້ໃດ.[22]ທີ່ກ່າວຢ່າງນັ້ນ ເພາະວ່າ "ບຸດມະນຸດຈະຕ້ອງທົນທຸກທໍຣະ-
ມານຫລາຍປະການ ພວກເຖົ້າແກ່ກັບພວກປະໂຣຫິດຕົນໃຫຍ່ແລະພວກທັມະຈານຈະບໍ່ຍອມຮັບພຣະອົງ ເຂົາຈະຂ້າພຣະອົງເສັຍ
ແລ້ວໃນວັນຖ້ວນສາມພຣະອົງຈະຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍ."
[23]ພຣະອົງກ່າວກັບຄົນທັງຫລາຍວ່າ, "ຖ້າຜູ້ໃດຈະຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເອງ ແລະແບກໄມ້ກາງແຂນຂອງຕົນທຸກວັນແລະຕິດ-
ຕາມເຮົາມາ.[24]ຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ, ແຕ່ຜູ້ນັ້ນຈະເສັຍຊີວິດ, ແຕ່ຜູ້ໃດຈະເສັຍຊີວິດຂອງຕົນເພາະເຫັນແກ່ເຮົາ
ຜູ້ນັ້ນກໍຈະຊ່ວຍຊີວິດຂອງຕົນໃຫ້ພົ້ນ.[25]ຈະໄດ້ປະໂຫຍດອັນໃດສຳລັບມະນຸດ ຖ້າເຂົາໄດ້ຮັບສິ່ງຂອງຫມົດທັງໂລກ ແຕ່ຈະຕ້ອງສູນເສັຍ
ຫຼືຖືກຕັດຊີວິດຂອງຕົນໄປ?
[26]ຜູ້ໃດກໍຕາມທີ່ມີຄວາມລະອາຍຕໍ່ເຮົາແລະຖ້ອຍຄຳຂອງເຮົາ, ບຸດມະນຸດກໍຈະມີຄວາມລະອາຍຕໍ່ຜູ້ນັ້ນເມື່ອເຮົາມາປາກົດດ້ວຍສະຫງ່າຣາ-
ສີຂອງພຣະອົງ, ແລະສະຫງ່າຣາສີຂອງພຣະບິດາເຈົ້າພ້ອມດ້ວຍພວກທູດສະຫວັນບໍຣິສຸດ.[27]ແຕ່ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ
ມີລາງຄົນທີ່ຢືນຢູ່ທີ່ນີ້ຈະບໍ່ຮູ້ຣົດຄວາມຕາຍຈົນກວ່າຈະໄດ້ເຫັນຣາຊະອານາຈັກຂອງພຣະເຈົ້າ."
[28]ປະມານແປດວັນຕໍ່ມາ ຫລັງຈາກພຣະເຢຊູເຈົ້າກ່າວຖ້ອຍຄຳເຫລົ່ານີ້ແລ້ວ, ພຣະອົງໄດ້ຊົງພາເປໂຕ, ໂຢຮັນ, ແລະຢາໂກໂບ
ຂຶ້ນໄປເທິງພູເພື່ອອະທິຖານ.[29]ຂະນະທີ່ພຣະອົງກຳລັງອະທິຖານຢູ່ນັ້ນ ພຣະພັກຂອງພຣະອົງກໍປ່ຽນໄປແລະເຄື່ອງທົ່ງຂອງພຣະອົງກໍຂາວເຫລື້ອມ.
[30]ເບິ່ງແມ, ມີຊາຍສອງຄົນກຳລັງສົນທະນາຢູ່ກັບພຣະອົງ ຄືໂມເຊແລະເອລີຢາ.[31]ຜູ້ມາປະກົດດ້ວຍຣັດສະຫມີ ພວກເຂົາກ່າວເຖິງການທີ່ພຣະ-
ອົງຈະສະເດັດຈາກໂລກໄປ ຊຶ່ງຈະສຳເລັດໃນນະຄອນເຢຣູຊາເລັມ.
[32]ຝ່າຍເປໂຕກັບຫມູ່ຂອງຕົນກໍເຫງົານອນ ແຕ່ເມື່ອພວກເຂົາຕື່ນຂຶ້ນແລ້ວ ພວກເຂົາກໍໄດ້ເຫັນພຣະຫງ່າຣາສີຂອງພຣະເຢຊູເຈົ້າ ແລະ
ເຫັນສອງຄົນນັ້ນຢືນຢູ່ກັບພຣະອົງ.[33]ຂະນະທີ່ສອງຄົນນັ້ນກຳລັງລາຈາກພຣະເຢຊູເຈົ້າໄປ, ເປໂຕໄດ້ທູນພຣະເຢຊູວ່າ, "ອາຈານເຈົ້າເອີຍ,
ເປັນການດີທີ່ພວກເຮົາຈະຢູ່ທີ່ນີ້ ແລະ ພວກຂ້ານ້ອຍພາກັນປຸກຕູບສາມຫລັງ, ຫລັງຫນຶ່ງສຳລັບທ່ານ, ຫລັງຫນຶ່ງສຳລັບໂມເຊ, ແລະ
ຫລັງຫນຶ່ງສຳລັບເອລີຢາ" (ເພິ່ນບໍ່ຮູ້ສຶກຕົວວ່າຕົນກຳລັງເວົ້າຫຍັງ.)
[34]ຂະນະທີ່ເປໂຕກຳລັງກ່າວຢູ່ນັ້ນກໍມີກ້ອນເມກມາປົກຫຸ້ມເພິ່ນໄວ້ ແລະເພິ່ນກໍຢ້ານເມື່ອຢູ່ໃນກ້ອນເມກນັ້ນ.[35]ແລະມີພຣະສຸຣະ-
ສຽງອອກມາຈາກເມກນັ້ນວ່າ, "ທ່ານຜູ້ນີ້ເປັນບຸດຂອງເຮົາຜູ້ທີ່ເຮົາເລືອກໄວ້ ຈົ່ງເຊື່ອຟັງທ່ານ."[36]ເມື່ອພຣະສຸຣະສຽງນັ້ນສະຫງົບລົງແລ້ວ
ກໍມີແຕ່ພຣະເຢຊູເຈົ້າຜູ້ດຽວຊົງຢູ່ທີ່ນັ້ນ, ສ່ວນພວກເຂົາທັງສາມກໍມິດຢູ່ ແລະໃນຄາວນັ້ນເຂົາບໍ່ໄດ້ບອກເຫດການທີ່ເຂົາໄດ້ເຫັນນັ້ນຈັກ-
ຢ່າງໃຫ້ຜູ້ໃດຟັງ.
[37]ວັນຕໍ່ມາ, ເມື່ອພຣະເຢຊູເຈົ້າພ້ອມກັບພວກສາວົກລົງມາຈາກພູເຂົາແລ້ວ ມີປະຊາຊົນຈຳນວນຫລາຍໄດ້ມາພົບພຣະອົງ.[38]ດັ່ງນີ້,
ມີຊາຍຄົນຫນຶ່ງໃນຫມູ່ປະຊາຊົນນັ້ນຮ້ອງຂຶ້ນວ່າ, "ອາຈານເອີຍ, ຂໍໂຜດເບິ່ງລູກຊາຍຂ້ານ້ອຍແດ່ທ້ອນ ເພາະຂ້ານ້ອຍມີແຕ່ລູກຄົນດຽວ.


generated on Tue Jun 17 19:01:42 2025

39ເບິ່ງແມ, ເມື່ອຜີຮ້າຍເຂົ້າສິງເດັກນ້ອຍ ມັນກໍຮ້ອງຂຶ້ນທັນທີ, ເຮັດໃຫ້ເດັກນ້ອຍຊັກດີ້ນ, ນໍ້າລາຍຟູມປາກ, ແລະໃຫ້ຕົວເດັກນ້ອຍຟົກຊໍ້າໄປ
ແລະບໍ່ຍອມອອກໄປຈາກມັນໄດ້ງ່າຍໆ.40ຂ້ານ້ອຍໄດ້ຂໍໃຫ້ພວກສາວົກຂອງທ່ານຂັບໄລ່ຜີນັ້ນອອກເສຍ ແຕ່ເຂົາເຮັດບໍ່ໄດ້."
41ພຣະເຢຊູເຈົ້າຕອບວ່າ, "ໂອຄົນໃນສະໄຫມທີ່ຂາດຄວາມເຊື່ອແລະມີໃຈຊົ່ວຊ້າ, ເຮົາຈະຕ້ອງທົນຢູ່ກັບເຈົ້າທັງຫລາຍເຫິງປານໃດ?
ຈົ່ງພາລູກຂອງທ່ານມານີ້ສາ!".42ເມື່ອເດັກນ້ອຍນັ້ນກຳລັງມາ ຜີໄດ້ເຮັດໃຫ້ມັນລົ້ມກິ້ງເກືອກໄປມາ ແຕ່ພຣະເຢຊູເຈົ້າກ່າວຊຳຣະຜີຖ່ອຍຮ້າຍນັ້ນ
ແລະຊົງເຮັດໃຫ້ເດັກນ້ອຍດີແລ້ວສົ່ງຄືນໃຫ້ພໍ່ຂອງລາວ.
43ຄົນທັງຫລາຍກໍງຶດປະຫລາດໃຈໃນຣິດເດດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ. ແຕ່ເມື່ອຂະນະທີ່ຄົນເຫລົ່ານັ້ນຍັງປະ-
ຫລາດໃຈຢູ່ກັບສິ່ງເຫລົ່ານັ້ນທີ່ພຣະເຢຊູເຈົ້າຊົງກະທຳ, ພຣະອົງຈຶ່ງກ່າວກັບພວກສາວົກຂອງພຣະອົງວ່າ,
44"ຈົ່ງໃຫ້ຄຳເຫລົ່ານີ້ເຂົ້າໄປໃນຫູຂອງພວກທ່ານ ເພາະວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືມະນຸດ."45ແຕ່ພວກສາວົກບໍ່ໄດ້ເຂົ້າ-
ໃຈເຖິງຄວາມຫມາຍນີ້ ແລະມັນຖືກປິດບັງໄວ້ຈາກພວກເຂົາ, ດັ່ງນັ້ນພວກເຂົາຈຶ່ງບໍ່ເຂົ້າໃຈໃນເລື່ອງນີ້ ແຕ່ພວກເຂົາບໍ່ກ້າຖາມເລື່ອງນັ້ນກັບພຣະ-
ອົງ.
46ຫລັງຈາກນັ້ນ ໄດ້ເກີດການຖຽງກັນຂຶ້ນໃນທ່າມກາງພວກສາວົກ ວ່າໃຜຈະເປັນໃຫຍ່ກວ່າຫມູ່.
47ຝ່າຍພຣະເຢຊູເຈົ້າຊົງຊາບຄວາມຄຶດໃນໃຈຂອງເພິ່ນ ພຣະອົງຈຶ່ງຊົງໃຫ້ເດັກນ້ອຍຄົນຫນຶ່ງມາຢືນຢູ່ໃກ້ພຣະອົງ.
48ແລະພຣະອົງກ່າວກັບເພິ່ນວ່າ, "ຖ້າຜູ້ໃດຍອມຮັບເດັກນ້ອຍຄົນນີ້ໃນນາມຂອງເຮົາ ຜູ້ນັ້ນກໍຍອມຮັບເຮົາ ແລະຖ້າຜູ້ໃດຍອມຮັບເຮົາ
ຜູ້ນັ້ນກໍຍອມຮັບພຣະອົງຜູ້ຊົງໃຊ້ເຮົາມາ ເພາະວ່າໃນພວກທ່ານທັງຫລາຍ ຜູ້ໃດເປັນຜູ້ເລັກນ້ອຍທີ່ສຸດ ຜູ້ນັ້ນແຫລະ, ເປັນຜູ້ຍິ່ງໃຫຍ່."
49ຝ່າຍໂຢຮັນທູນພຣະອົງວ່າ, "ທ່ານອາຈານເອີຍ, ພວກຂ້ານ້ອຍໄດ້ເຫັນບາງຄົນຂັບໄລ່ຜີອອກໃນນາມຂອງພຣະອົງ ແລະພວກຂ້າ-
ນ້ອຍໄດ້ຫ້າມຄົນນັ້ນເສັຍ ເພາະເພິ່ນບໍ່ຮ່ວມຕິດຕາມພຣະອົງກັບພວກຂ້ານ້ອຍ."50ແຕ່ພຣະເຢຊູເຈົ້າຕອບໂຢຮັນວ່າ, "ຢ່າຫ້າມເທາະ, ເພາະ-
ວ່າຜູ້ໃດບໍ່ຕໍ່ສູ້ພວກທ່ານກໍເປັນຝ່າຍທ່ານແລ້ວ."
51ໃນເວລານັ້ນຊຶ່ງໃກ້ວັນທີ່ພຣະເຢຊູເຈົ້າຈະຖືກຮັບຂຶ້ນເມືອສູ່ສະຫວັນ, ພຣະອົງຊົງຕັ້ງພຣະໃຈຢ່າງຄັກແນ່ທີ່ຈະໄປນະຄອນເຢຣູຊາເລັມ.52ພຣະ-
ອົງໄດ້ຊົງໃຊ້ຜູ້ຮັບໃຊ້ໄປກ່ອນຫນ້າພຣະອົງ, ພວກເພິ່ນຈຶ່ງອອກໄປແລະເຂົ້າໄປໃນບ້ານຫນຶ່ງຂອງຊາວຊາມາເຣັຍ ເພື່ອຈັດຕຽມທຸກສິ່ງໄວ້ສຳ-
ລັບພຣະອົງ.53ແຕ່ຊາວບ້ານນັ້ນບໍ່ໄດ້ຕ້ອນຮັບພຣະອົງ ເພາະພຣະອົງກຳລັງມຸ້ງຫນ້າທີ່ຈະໄປນະຄອນເຢຣູຊາເລັມ.
54ດັ່ງນັ້ນ ເມື່ອສາວົກຂອງພຣະອົງ ຄືຢາໂກໂບແລະໂຢຮັນ ໄດ້ເຫັນດັ່ງນັ້ນພວກເຂົາຈຶ່ງທູນວ່າ, "ພຣະອົງເຈົ້າເອີຍ, ພຣະອົງຢາກໃຫ້ພວກຂ້າ-
ນ້ອຍສັ່ງໄຟລົງມາຈາກສະຫວັນ ເພື່ອເຜົາຜານເມືອງນີ້ຫລືບໍ່?".55ແຕ່ພຣະອົງຊົງຫລຽວຫລັງແລະຫ້າມພວກເພິ່ນທັງສອງ,56ແລະພຣະ-
ອົງໄດ້ສະເດັດພ້ອມກັບພວກສາວົກເຂົ້າໄປທີ່ບ້ານອື່ນ.
57ຂະນະທີ່ພຣະອົງເຢຊູເຈົ້າພ້ອມກັບພວກສາວົກກຳລັງສະເດັດໄປຕາມທາງ ມີຊາຍຄົນຫນຶ່ງທູນພຣະອົງວ່າ, "ຂ້ານ້ອຍຈະຕິດ-
ຕາມພຣະອົງໄປທຸກບ່ອນ."58ພຣະເຢຊູເຈົ້າຕອບລາວວ່າ, "ຫມາຈິກຈອກຍັງມີຫມົ້ງນອນແລະນົກປ່າກໍຍັງມີຮັງ, ແຕ່ບຸດມະ-
ນຸດບໍ່ມີບ່ອນຈະວາງຫົວລົງ."
59ພຣະອົງກ່າວກັບອີກຄົນຫນຶ່ງວ່າ, "ຈົ່ງຕາມເຮົາມາ" ຄົນນັ້ນທູນຕອບວ່າ, "ອົງພຣະຜູ້ເປັນເຈົ້າ ຂໍໂຜດອະນຸຍາດໃຫ້ຂ້າ-
ນ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສັຍກ່ອນ."60ພຣະເຢຊູເຈົ້າຕອບຜູ້ນັ້ນວ່າ, "ຈົ່ງປະໃຫ້ຄົນຕາຍຝັງກັນເອງເທາະ ແຕ່ທ່ານຈົ່ງໄປແລະປະ-
ກາດກ່ຽວກັບຣາຊະອານາຈັກຂອງພຣະເຈົ້າທຸກຫົນທຸກແຫ່ງ."
61ແຕ່ມີອີກຄົນຫນຶ່ງທູນວ່າ, "ອົງພຣະຜູ້ເປັນເຈົ້າຂ້ານ້ອຍຈະຕາມທ່ານໄປ ແຕ່ຂໍອະນຸຍາດໃຫ້ຂ້າ-
ນ້ອຍໄປລາໄທເຮືອນຂອງຂ້ານ້ອຍກ່ອນ."62ພຣະເຢຊູເຈົ້າຕອບເຂົາວ່າ"ຜູ້ໃດເອົາມືຈັບງ້ອນໄຖແລ້ວຫລຽວຄືນຫລັງ ຜູ້ນັ້ນບໍ່ສົມ-
ຄວນກັບຣາຊະອານາຈັກຂອງພຣະເຈົ້າ."


generated on Tue Jun 17 19:01:42 2025

10 [1]ຫລັງຈາກນັ້ນ ອົງພຣະຜູ້ເປັນເຈົ້າໄດ້ຊົງຕັ້ງອີກເຈັດສິບຄົນ ແລະສົ່ງພວກເຂົາອອກໄປເປັນຄູ່ ໆ
ລ່ວງຫນ້າາພຣະອົງເຂົ້າໄປໃນທຸກເມືອງແລະທຸກບ້ານບ່ອນພຣະອົງຈະສະເດັດໄປນັ້ນ.[2]ພຣະອົງຊົງກ່າວກັບເຂົາວ່າ,
"ເຂົ້າທີ່ຈະກ່ຽວກໍມີຫລາຍແທ້, ແຕ່ຄົນທຳງານນັ້ນຫນ້ອຍຢູ່. ເພາະສັນນັ້ນພວກທ່ານຈົ່ງພາວັນນາອະທິຖານຕໍ່ຜູ້ເປັນເຈົ້າຂອງນາ
ໃຫ້ສົ່ງຄົນງານມາເກັບກ່ຽວເຂົ້າຂອງພຣະອົງ.

[3]ຈົ່ງອອກໄປຕາມທາງຂອງທ່ານ. ເບິ່ງແມ! ເຮົາໄດ້ໃຊ້ພວກທ່ານໄປເຫມືອນດັ່ງແກະນ້ອຍຢູ່ທ່າມກາງຝູງຫມາໄນ.[4]ຢ່າຖືກະເປົາເງິນ, ຫລືຖືຖົງ,
ຫລືຖືເກີບໄປນຳ ແລະຢ່າຄຳນັບຜູ້ໃດຕາມທາງ.
[5]ເມື່ອທ່ານທັງຫລາຍເຂົ້າໄປໃນເຮືອນຫລັງໃດກໍຕາມ ຈົ່ງເວົ້າກ່ອນວ່າ 'ຂໍໃຫ້ສັນຕິສຸກຈົ່ງມີແກ່ເຮືອນຫລັງນີ້!'.
[6]ຖ້າມີຄົນມັກສັນຕິສຸກຢູ່ໃນເຮືອນນັ້ນ ສັນຕິສຸກຂອງທ່ານຈະສະຖິດຢູ່ກັບຜູ້ນັ້ນ ຖ້າຫາກບໍ່ມີ, ສັນຕິສຸກນັ້ນຈະກັບຄືນມາຫາທ່ານອີກ.
[7]ຈົ່ງອາໄສຢູ່ໃນເຮືອນນັ້ນ, ຈົ່ງກິນແລະດື່ມຕາມທີ່ເຂົາມີຢູ່ ດ້ວຍວ່າຜູ້ທຳງານກໍຄວນຈະໄດ້ຮັບຄ່າຈ້າງຂອງຕົນ
ຢ່າອອກຫນີຈາກເຮືອນນີ້ເຂົ້າໄປຢູ່ເຮືອນອື່ນ.
[8]ບໍ່ວ່າທ່ານຈະເຂົ້າໄປໃນເມືອງໃດ ແລະພວກເຂົາຕ້ອນຮັບທ່ານໄວ້ ຈົ່ງກິນຂອງທີ່ພວກເຂົາຈັດໃຫ້ຕໍ່ຫນ້າທ່ານ.
[9]ແລະຈົ່ງຮັກສາຄົນເຈັບປ່ວຍຢູ່ໃນເມືອງນັ້ນດີພະຍາດ, ບອກແກ່ພວກເຂົາວ່າ 'ຣາຊະອານາຈັກຂອງພຣະເຈົ້າໄດ້ມາໃກ້ທ່ານທັງຫລາຍແລ້ວ'.
[10]ແຕ່ເມື່ອພວກທ່ານເຂົ້າໃນເມືອງໃດ ແລະເຂົາບໍ່ຕ້ອນຮັບທ່ານໄວ້ ຈົ່ງອອກໄປກາງຖະຫນົນແລະກ່າວວ່າ.
[11]'ແມ່ນວ່າຂີ້ຝຸ່ນດິນໃນເມືອງຂອງເຈົ້າທີ່ຕິດຕີນຂອງພວກເຮົາ ເຮົາຂໍປັດອອກຕໍ່ສູ້ພວກເຈົ້າ! ແຕ່ຈົ່ງເຂົ້າໃຈຂໍ້ນີ້ວ່າ: ຣາຊະອານາຈັກຂອງພຣະ-
ເຈົ້າໄດ້ມາໃກ້ພວກເຈົ້າແລ້ວ'.[12]ເຮົາບອກພວກທ່ານວ່າໃນວັນພິພາກສາ ໂທດຂອງເມືອງໂຊດົມໃນວັນນັ້ນຈະເບົາກວ່າ ໂທດຂອງເມືອງນີ້."
[13]"ວິບັດແກ່ເຈົ້າເມືອງໂຂຣາຊິນ, ວິບັດແກ່ເຈົ້າເມືອງເບັດຊາອີດາ ເອີຍ, ຖ້າການອັດສະຈັນເຫລົ່ານັ້ນທີ່ໄດ້ກະທຳໃນທ່າມກາງພວກເຈົ້ານັ້ນ
ໄດ້ຖືກກະທຳໃນຖ້າມກາງເມືອງຕີເຣແລະເມືອງຊີໂດນແລ້ວນັ້ນ, ຄົນໃນເມືອງທັງສອງຄົງໄດ້ຖິ້ມໃຈເກົ່າເອົາໃຈໃຫມ່, ນຸ່ງຫົ່ມຜ້າຫຍາບ,
ນັ່ງເທິງຂີ້ເຖົ່າແຕ່ດົນນານມາແລ້ວ.[14]ແຕ່ໂທດຂອງເມືອງຕີເຣແລະເມືອງຊີໂດນຈະເບົາກວ່າໂທດຂອງພວກເຈົ້າ ໃນວັນພິພາກສາ.[15]ຝ່າຍເຈົ້າ,
ເມືອງກາເປນາອູມເອີຍເຈົ້າຄິດວ່າ ເຈົ້າຈະຖືກຍົກຂຶ້ນສູງພຽງຟ້າຫລື? ແຕ່ເຈົ້າຈະຖືກຖິ້ມລົງໄປໃນບຶງໄຟນະຮົກ.
[16]"ຜູ້ທີ່ຟັງທ່ານທັງຫລາຍກໍໄດ້ຟັງເຮົາ, ແລະຜູ້ທີ່ບໍ່ຍອມຮັບທ່ານທັງຫລາຍກໍບໍ່ຍອມຮັບເຮົາ, ແລະຜູ້ທີ່ບໍ່ຍອມຮັບເຮົາກໍບໍ່ຍອມ-
ຮັບຜູ້ທີ່ຊົງໃຊ້ເຮົາມາ."
[17]ຝ່າຍພວກເຈັດສິບຄົນ ໄດ້ກັບຄືນມາດ້ວຍຄວາມຊື່ນຊົມຍິນດີ ທູນວ່າ, "ອົງພຣະຜູ້ເປັນເຈົ້າ,
ແມ່ນແຕ່ຜີມານຮ້າຍກໍຍອມຟັງຄວາມຂອງພວກຂ້ານ້ອຍໃນນາມຊື່ຂອງພຣະອົງ."[18]ພຣະເຢຊູເຈົ້າກ່າວກັບເພິ່ນວ່າ, "ເຮົາໄດ້ເຫັນຊາ-
ຕານຕົກຈາກຟ້າເຫມືອນດັ່ງຟ້າແມບ.[19]ເບິ່ງແມ! ເຮົາໄດ້ໃຫ້ພວກທ່ານມີອຳນາດຢຽບງູແລະແມງງອດ, ແລະໃຫ້ມີອຳນາດເຫນືອກຳລັງຂອງສັດ-
ຕຣູ ແລະບໍ່ມີສິ່ງໃດເຮັດອັນຕະຣາຍແກ່ພວກທ່ານໄດ້ເລີຍ.[20]ແຕ່ຢ່າໄດ້ຊື່ນຊົມຍິນດີໃນສິ່ງເຫລົ່ານີ້ເພາະຜີທັງຫລາຍຍອມຟັງຄວາມຂອງທ່ານ
ແຕ່ຈົ່ງຊົມຊື່ນຍິນດີເພາະຊື່ຂອງພວກທ່ານໄດ້ຈົດໄວ້ໃນສະຫວັນແລ້ວ."
[21]ໃນຂະນະດຽວກັນ ພຣະເຢຊູເຈົ້າຊົງມີຄວາມຊົມຊື່ນຍິນດີໃນພຣະວິນຍານບໍຣິສຸດ ເຈົ້າແລະກ່າວວ່າ, "ຂ້າພຣະອົງສັນຣະເສີນແດ່ພຣະບິ-
ດາເຈົ້າ, ອົງພຣະຜູ້ເປັນເຈົ້າແຫ່ງຟ້າສະຫວັນແລະແຜ່ນດິນໂລກ ເພາະພຣະອົງຊົງໄດ້ປົກບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຍາແລະຜູ້ສະຫລາດ
ແຕ່ໄດ້ຊົງເປີດເຜີຍສິ່ງນັ້ນໃຫ້ແກ່ບັນດາຄົນທີ່ບໍ່ໄດ້ຮັບການສອນ ເຊິ່ງເປັນເຫມືອນເດັກນ້ອຍ, ແມ່ນແລ້ວ, ພຣະບິດາ,
ເພາະນີ້ເປັນສິ່ງທີ່ເຫັນຊອບຕໍ່ສາຍຕາຂອງພຣະອົງ."
[22]"ພຣະບິດາຂອງເຮົາໄດ້ມອບສິ່ງສາຣະພັດໃຫ້ແກ່ເຮົາ ແລະບໍ່ມີໃຜຮູ້ວ່າພຣະບຸດແມ່ນຜູ້ໃດ ເວັ້ນໄວ້ແຕ່ພຣະບິດາ ແລະບໍ່ມີໃຜຮູ້ວ່າພຣະບິ-
ດາແມ່ນຜູ້ໃດ ເວັ້ນໄວ້ແຕ່ພຣະບຸດ ກັບຜູ້ທີ່ພຣະບຸດປະສົງຈະສະແດງໃຫ້ຮູ້."
[23]ແລ້ວພຣະເຢຊູເຈົ້າກໍຫລຽວໄປຫາພວກສາວົກ ແລະກ່າວແກ່ພວກເພິ່ນເປັນການສ່ວນຕົວວ່າ,
"ບັນດາຜູ້ທີ່ເຫັນແບບດຽວກັບທີ່ທ່ານເຫັນກໍເປັນສຸກ.[24]ເຮົາບອກທ່ານທັງຫລາຍວ່າ ຜູ້ປະກາດພຣະທັມຫລາຍຄົນ ແລະກະ-
ສັດຫລາຍອົງປາຖນາຈະເຫັນສິ່ງທີ່ພວກທ່ານເຫັນຢູ່ນີ້ ແຕ່ກໍບໍ່ໄດ້ເຫັນ ແລະປາຖນາທີ່ໄດ້ຍິນສິ່ງທີ່ພວກທ່ານໄດ້ຍິນ ແຕ່ກໍບໍ່ໄດ້ຍິນສິ່ງນັ້ນ."
[25]ເບິ່ງແມ, ມີອາຈານສອນພຣະບັນຍັດຂອງພວກຄົນຢິວຄົນຫນຶ່ງຢືນຂຶ້ນ ເພື່ອທົດລອງພຣະເຢຊູເຈົ້າ ທູນຖາມວ່າ, "ທ່ານອາຈານເອີຍ, ຂ້າ-
ນ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຊີວິດອັນຕະຫລອດໄປເປັນນິດ?".[26]ພຣະເຢຊູເຈົ້າ ຕອບລາວວ່າ, "ພຣະບັນຍັດຂຽນໄວ້ວ່າຢ່າງໃດ?
ທ່ານໄດ້ອ່ານແລ້ວເຂົ້າໃຈຢ່າງໃດ?".[27]ເພິ່ນທູນຕອບວ່າ, "ທ່ານຈົ່ງຮັກອົງພຣະຜູ້ເປັນເຈົ້າ ຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ, ດ້ວຍສຸດຈິດ,
ດ້ວຍສຸດກຳລັງ, ແລະດ້ວຍສຸດຄວາມຄິດຂອງເຈົ້າ' ແລະຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ'."[28]ພຣະເຢຊູເຈົ້າຕອບເພິ່ນວ່າ,
"ທ່ານຕອບຖືກແລ້ວ. ຈົ່ງເຮັດຢ່າງນັ້ນ ແລ້ວທ່ານຈະໄດ້ຊີວິດ."
[29]ແຕ່ອາຈານທ່ານນັ້ນຢາກສະແດງວ່າຕົນເປັນຄົນສິນທັມ ຈຶ່ງທູນພຣະເຢຊູເຈົ້າວ່າ, "ແມ່ນໃຜເປັນເພື່ອນບ້ານຂອງຂ້ານ້ອຍ?"[30]ພຣະ-
ເຢຊູເຈົ້າຕອບວ່າ, "ມີຊາຍຄົນຫນຶ່ງລົງຈາກນະຄອນເຢຣູຊາເລັມຈະໄປເມືອງເຢຣີໂກ. ເພິ່ນໄດ້ຕົກໃນມືພວກໂຈນທີ່ປຸ້ນເອົາສິ່ງຂອງຜູ້ນັ້ນໄປ
ແລະທັງທຸບຕີ ແລ້ວປະຖິ້ມໄວ້ເກືອບຕາຍ.
[31]ບັງເອີນມີປະໂຣຫິດຄົນຫນຶ່ງໄດ້ລົງໄປທາງນັ້ນ ເມື່ອເຂົາໄດ້ເຫັນຄົນເຈັບນັ້ນກໍເວັ້ນໄປຟາກອື່ນເສັຍ.[32]ເຊັ່ນດຽວກັບເລວີຄົນຫນຶ່ງ
ເມື່ອມາເຖິງບ່ອນນັ້ນແລະເຫັນຄົນເຈັບນັ້ນ ກໍເວັ້ນກາຍໄປຟາກອື່ນເສັຍ.
[33]ແຕ່ມີໄທຊາມາເຣັຍຄົນຫນຶ່ງໄດ້ເດີນທາງຜ່ານມາທີ່ຄົນເຈັບນອນຢູ່ນັ້ນ, ຄັນເຂົາເຫັນຄົນເຈັບແລ້ວກໍມີໃຈເມດຕາ.[34]ເພິ່ນຈຶ່ງເຂົ້າໄປເອົາຜ້າ-
ພັນບາດໃຫ້ ແລະເອົານ້ຳມັນກັບເຫລົ້າແວງຖອກໃສ່ບາດນັ້ນ ຈຶ່ງໂຈມຂຶ້ນຂີ່ສັດຂອງຕົນພາໄປເຖິງໂຮງແຮມ, ແລະເອົາໃຈໃສ່ບົວຣະບັດລາວ.
[35]ໃນມື້ຖັດມາ ທ່ານໄດ້ອອກເງິນສອງເດນາຣີອົນໃຫ້ເຈົ້າຂອງໂຮງແຮມ ບອກວ່າ, 'ຈົ່ງເບິ່ງແຍງຄົນນີ້ເດີ, ຖ້າທ່ານຈ່າຍເກີນນີ້ໄປເທົ່າໃດ
ເມື່ອເຮົາກັບມາກໍຈະໃຊ້ໃຫ້'.
[36]ທ່ານຄິດວ່າຄົນໃດໃນສາມຄົນນີ້ເປັນເພື່ອນບ້ານຂອງຄົນທີ່ຖືກໂຈນປຸ້ນນັ້ນ."[37]ອາຈານຜູ້ນັ້ນທູນຕອບວ່າ, "ຊາຍທີ່ໄດ້ສະ-
ແດງຄວາມເມດຕາໃຫ້ແກ່ຄົນເຈັບ," ພຣະເຢຊູເຈົ້າບອກລາວວ່າ, "ຈົ່ງໄປເຮັດແບບດຽວກັນເຖີດ.


generated on Tue Jun 17 19:01:42 2025

38ໃນຂະນະເມື່ອພວກເຂົາເດີນທາງ, ພຣະອົງກໍເຂົ້າໄປໃນຫມູ່ບ້ານຫນຶ່ງ ແລະມີຍິງຄົນຫນຶ່ງຊື່ມາທາໄດ້ຕ້ອນຮັບພຣະອົງເຂົ້າໃນເຮືອນຂອງຕົນ.
39ມາທາມີນ້ອງສາວຊື່ມາຣີອາ ເຊິ່ງເປັນຜູ້ທີ່ນັ່ງໃກ້ຕີນຂອງອົງພຣະເຢຊູຄຣິດເຈົ້າ ແລະຟັງຖ້ອຍຄຳຂອງພຣະອົງ.
40ແຕ່ມາທາໄດ້ມົວເມົາຢູ່ໃນການຈັດຕຽມອາຫານຫລາຍເກີນໄປ. ນາງຈຶ່ງໄດ້ມາຫາພຣະເຢຊູ ແລະບອກວ່າ, “ອົງພຣະຜູ້ເປັນເຈົ້າເອີຍ,
ພຣະອົງບໍ່ສົນໃຈຫລືວ່ານ້ອງສາວຂອງຂ້ານ້ອຍປະໃຫ້ຂ້ານ້ອຍປະຕິບັດແຕ່ຜູ້ດຽວ? ສະນັ້ນຂໍບອກໃຫ້ລາວມາຊ່ອຍຂ້ານ້ອຍແດ່!”.
41ແຕ່ອົງພຣະຜູ້ເປັນເຈົ້າຕອບລາວວ່າ, “ມາທາ, ມາທາເອີຍ, ເຈົ້າວຸ້ນວາຍໃຈກັບຫລາຍສິ່ງແທ້! 42ສິ່ງຊຶ່ງຈຳເປັນນັ້ນມີແຕ່ສິ່ງດຽວ ມາຣີ-
ອາໄດ້ເລືອກເອົາສິ່ງທີ່ດີທີ່ສຸດນັ້ນ ເຊິ່ງຈະຍຶກເອົາໄປຈາກນາງບໍ່ໄດ້.”


generated on Tue Jun 17 19:01:42 2025

11 [1]ໃນຂະນະທີ່ພຣະເຢຊູເຈົ້າກຳລັງອະທິຖານຢູ່ທີ່ແຫ່ງຫນຶ່ງ ສາວົກຂອງພຣະອົງຄົນຫນຶ່ງທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ,
ຂໍສອນພວກຂ້ານ້ອຍໃຫ້ອະທິຖານເຫມືອນກັບທີ່ໂຢຮັນໄດ້ສອນພວກລູກສິດຂອງເພິ່ນດວ້ຍ.”

[2]ພຣະເຢຊູເຈົ້າກ່າວກັບພວກເພິ່ນວ່າ, “ເມື່ອພວກທ່ານອະທິຖານຈົ່ງກ່າວວ່າ, ‘ຂ້າແດ່ພຣະບິດາເຈົ້າ
ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ ຂໍໃຫ້ຣາຊະອານາຈັກຂອງພຣະອົງມາຕັ້ງຢູ່.
[3]ຂໍຊົງໂຜດປຣະທານອາຫານປະຈຳວັນໃຫ້ແກ່ພວກຂ້ານ້ອຍທັງຫລາຍ.[4]ຂໍຊົງໂຜດຍົກໂທດຄວາມຜິດບາບຂອງພວກຂ້ານ້ອຍ
ເຫມືອນທີ່ພວກຂ້ານ້ອຍຍົກໂທດແກ່ທຸກຄົນ ທີ່ເຮັດຜິດຕໍ່ພວກຂ້ານ້ອຍນັ້ນ. ຂໍຢ່າຊົງນຳພວກຂ້ານ້ອຍ ເຂົ້າໄປໃນການທົດລອງ’.”
[5]ພຣະເຢຊູເຈົ້າຊົງກ່າວກັບຄົນເຫລົ່ານັ້ນວ່າ, “ຜູ້ໃດໃນພວກທ່ານມີມິດສະຫາຍຄົນຫນຶ່ງ ແລະໄປຫາມິດສະຫາຍນັ້ນໃນເວ-
ລາທ່ຽງຄືນແລະເວົ້າວ່າ ‘ສະຫາຍເອີຍ, ຂໍໃຫ້ຂ້ອຍຢືມເຂົ້າຈີ່ຈັກສາມກ້ອນແດ່.[6]ເພາະເພື່ອນຄົນຫນຶ່ງຂອງເຮົາເດີນ-
ທາງຈາກບ່ອນອື່ນມາແວ່ເຮົາແລະເຮົາບໍ່ໄດ້ກຽມອັນໃດຈະສູ່ເພິ່ນກິນ’.[7]ຝ່າຍມິດສະຫາຍທີ່ຢູ່ຂ້າງໃນຈະຕອບອອກມາວ່າ,
‘ຢ່າລົບກວນເຮົາເທາະປະຕູກໍອັດແລ້ວ, ພວກລູກຂອງເຮົາກໍນອນຢູ່ກັບເຮົາຫມົດແລ້ວ, ເຮົາລຸກຂຶ້ນເອົາເຂົ້າຈີ່ໃຫ້ເຈົ້າບໍ່ໄດ້’.
[8]ເຮົາບອກທ່ານທັງຫລາຍວ່າ ເຖິງແມ່ນວ່າຜູ້ນັ້ນຈະບໍ່ລຸກຂຶ້ນເອົາໃຫ້ເພາະການເປັນເພື່ອນກັນກໍຕາມ ແຕ່ຖ້າເພາະເຫັນແກ່ການທີ່ຂໍຢ່າງບໍ່ລະອາຍ
ເພິ່ນກໍຈະລຸກຂຶ້ນແລະເອົາເຂົ້າຈີ່ໃຫ້ທ່ານເທົ່າທີ່ທ່ານຕ້ອງການ.
[9]ແລະເຮົາບອກພວກທ່ານວ່າ ຈົ່ງຫມັ່ນຂໍ ແລ້ວຈະຊົງປຣະທານໃຫ້ ຈົ່ງຫມັ່ນຊອກແລ້ວຈະພົບ ຈົ່ງຫມັ່ນເຄາະແລ້ວຈະຊົງໄຂໃຫ້.[10]ເພາະ-
ວ່າທຸກຄົນທີ່ຫມັ່ນຂໍກໍໄດ້ຮັບ ທຸກຄົນທີ່ຫມັ່ນຊອກຫາກໍໄດ້ພົບ ແລະທຸກຄົນທີ່ຫມັ່ນເຄາະກໍຈະເປີດໃຫ້ແກ່ເຂົາ.
[11]ມີພໍ່ຄົນໃດໃນພວກທ່ານ ຖ້າລູກຂໍປາຈະເອົາງູໃຫ້ລູກແທນປາບໍ?[12]ຫລືເມື່ອລູກຂໍໄຂ່ ທ່ານຈະເອົາແມງງອດໃຫ້ລູກ?[13]ເຫດສັນນັ້ນຖ້າທ່ານທັງ-
ຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາເຈົ້າຜູ້ຊົງສະຖິດໃນສະຫວັນຈະປຣະ-
ທານພຣະວິນຍານບໍຣິສຸດເຈົ້າໃຫ້ແກ່ຜູ້ທີ່ຂໍຈາກພຣະອົງ?"
[14]ຫລັງຈາກນັ້ນ ພຣະເຢຊູເຈົ້າໄດ້ຂັບໄລ່ຜີຮ້າຍອອກ ເປັນຜີໃບ້. ເມື່ອຜີນັ້ນຖືກຂັບໄລ່ອອກແລ້ວຊາຍທີ່ເປັນຄົນໃບ້ກໍເລີ່ມປາກໄດ້, ປະຊາ-
ຊົນກໍປະຫລາດໃຈ.[15]ແຕ່ບາງຄົນໃນຫມູ່ນັ້ນໄດ້ເວົ້າວ່າ, “ຜູ້ນີ້ຂັບໄລ່ຜີອອກໄດ້ໂດຍໃຊ້ອຳນາດຂອງເບເອນເຊບູນຊຶ່ງເປັນນາຍຂອງພວກຜີຮ້າຍ.
[16]ສ່ວນຄົນອື່ນຢາກຈະທົດລອງພຣະເຢຊູເຈົ້າ ແລະຖາມຫາຫມາຍສຳຄັນຈາກຟ້າສະຫວັນ.[17]ແຕ່ພຣະ-
ອົງຊົງຊາບຄວາມຄິດຂອງເຂົາຈຶ່ງຊົງກ່າວວ່າ, “ທຸກອານາຈັກທີ່ແຕກແຍກກັນແລ້ວກໍຄົງຈິບຫາຍ, ຄອບຄົວທີ່ແຕກແຍກກັນ
ແລ້ວກໍຈະຕັ້ງຢູ່ບໍ່ໄດ້."
[18]ຖ້າຊາຕານແຕກແຍກກັນເອງ ອານາຈັກຂອງມັນຈະຕັ້ງຫມັ້ນຢູ່ໄດ້ຢ່າງໃດ? ເພາະທ່ານທັງຫລາຍເວົ້າວ່າເຮົາຂັບໄລ່ຜີອອກໂດຍເບເອນເຊບູນ.
[19]ຖ້າເຮົາຂັບໄລ່ຜີອອກໂດຍເບເອນເຊບູນນັ້ນ, ພວກສາວົກຂອງທ່ານທັງຫລາຍເຄີຍຂັບມັນອອກດ້ວຍອຳນາດຂອງຜູ້ໃດ? ດ້ວຍເຫດນີ້ແຫລະ,
ພວກສາວົກຈະຕັດສິນພິພາກສາພວກທ່ານ.[20]ແຕ່ຖ້າເຮົາຂັບໄລ່ຜີມານຮ້າຍອອກດ້ວຍຣິດອຳນາດຂອງພຣະເຈົ້າ, ຣາຊະອານາຈັກຂອງພຣະ-
ເຈົ້າກໍມາເຖິງພວກທ່ານແລ້ວ.
[21]ເມື່ອຊາຍທີ່ແຂງແຮງຖືອາວຸດຄົບຖ້ວນເຝົ້າເຮືອນຂອງຕົນຢູ່ ສິ່ງຂອງທັງຫມົດຂອງລາວກໍປອດພັຍ.[22]ແຕ່ເມື່ອຊາຍທີ່ແຂງແຮງກວ່າເອົາຊະ-
ນະຄົນນັ້ນໄດ້, ຄົນແຂງແຮງກວ່າຈະຍຶດເອົາອາວຸດໄປຈາກເຂົາ ແລະລັກເອົາຊັບສິນບັດຂອງເຂົາໄປເສັຍ.[23]ຜູ້ໃດບໍ່ຢູ່ຝ່າຍເຮົາ ກໍຕໍ່ສູ້ກັບເຮົາ
ແລະຜູ້ໃດບໍ່ໂຮມເຂົ້າກັບເຮົາກໍເປັນຜູ້ເຮັດໃຫ້ແຕກກະຈາຍໄປ.
[24]“ເມື່ອຜີຖ່ອຍຮ້າຍອອກຈາກຊາຍຄົນຫນຶ່ງ ມັນກໍເດີນທາງຜ່ານໄປໃນບ່ອນກັນດານເພື່ອຊອກຫາບ່ອນເຊົາເມື່ອຍ, ເມື່ອຫາບໍ່ພົບ ມັນຈຶ່ງເວົ້າວ່າ
‘ເຮົາຈະກັບຄືນໄປຍັງເຮືອນຂອງເຮົາທີ່ເຮົາໄດ້ອອກມານັ້ນ.[25]ເມື່ອຜີນັ້ນກັບມາແລະເຫັນວ່າເຮືອນນັ້ນຖືກເຮັດໃຫ້ສະອາດດີແລະຕົກ-
ແຕ່ງໄວ້ແລ້ວ.[26]ເມື່ອນັ້ນມັນຈຶ່ງໄປຮັບເອົາຜີອື່ນອີກເຈັດໂຕຮ້າຍກວ່າມັນເອງ ແລະກໍເຂົ້າໄປອາໄສຢູ່ເຮືອນຫລັງນັ້ນ ແລະໃນທີ່ສຸດ
ຊາຍຄົນນັ້ນກໍຕົກຢູ່ໃນສະພາບຮ້າຍກວ່າຕອນຕົ້ນ.”
[27]ໃນຂະນະທີ່ພຣະອົງຊົງກ່າວຖ້ອຍຄຳເຫລົ່ານັ້ນຢູ່ ກໍມີຍິງສາວຄົນຫນຶ່ງໃນຫມູ່ປະຊາຊົນຮ້ອງທູນພຣະອົງວ່າ, “ທ້ອງ-
ຂອງຍິງທີ່ໃຫ້ກຳເນີດທ່ານແລະເຕົ້ານົມທີ່ລ້ຽງທ່ານນັ້ນກໍເປັນສຸກ.”[28]ແຕ່ພຣະອົງຊົງຕອບວ່າ, “ບໍ່ແມ່ນເລີຍ ຄົນທັງຫລາຍທີ່ຟັງພຣະ-
ທັມຂອງພຣະເຈົ້າ ແລະຖືຮັກສາພຣະທັມໄວ້ຕ່າງຫາກທີ່ເປັນສຸກ.”
[29]ເມື່ອປະຊາຊົນເລີ່ມມາໂຮມກັນຫນາແຫນ້ນຂຶ້ນ ພຣະອົງຊົງກ່າວວ່າ, “ຄົນໃນຍຸກນີ້ເປັນຍຸກທີ່ຊົ່ວຮ້າຍ ເຂົາສະແຫວງຫາຫມາຍສຳຄັນ
ແຕ່ຈະບໍ່ມີຫມາຍສຳຄັນອັນໃດເປີດເຜີຍໃຫ້ແກ່ເຂົາ ເວັ້ນໄວ້ແຕ່ຫມາຍສຳຄັນເລື່ອງໂຢນາ.[30]ເຫມືອນກັບທີ່ໂຢນາໄດ້ເປັນຫມາຍສຳ-
ຄັນແກ່ຊາວເມືອງນີເນເວ, ດັ່ງນັ້ນ ບຸດມະນຸດຈະເປັນຫມາຍສຳຄັນແກ່ຄົນໃນຍຸກນີ້.
[31]ຣາຊີນີແຫ່ງທິດໃຕ້ຈະລຸກຂຶ້ນໃນການພິພາກສາພ້ອມກັບຜູ້ຊາຍໃນຍຸກນີ້ ແລະລົງໂທດຄົນໃນຍຸກນີ້
ເພາະນາງໄດ້ມາແຕ່ທີ່ສຸດປາຍແຜ່ນດິນໂລກ ເພື່ອຈະຟັງຄຳສັ່ງສອນທີ່ມີສະຕິປັນຍາຂອງກະສັດໂຊໂລໂມນ ແລະ ເບິ່ງແມ! ຜູ້ທີ່ຍິ່ງໃຫຍ່ກວ່າກະ-
ສັດໂຊໂລໂມນກໍຢູ່ທີ່ນີ້.
[32]ຊາວເມືອງນີເນເວຈະຢືນຂຶ້ນໃນວັນພິພາກສາພ້ອມກັບຄົນໃນຍຸກນີ້ ແລະຈະກ່າວໂທດຄົນໃນຍຸກນີ້ ເມື່ອພວກເຂົາໄດ້ຖິ້ມໃຈເກົ່າເອົາ-
ໃຈໃຫມ່ເພາະການປະກາດຂອງໂຢນາ ແລະເບິ່ງແມ, ຜູ້ທີ່ຍິ່ງໃຫຍ່ກວ່າໂຢນາກໍຢູ່ທີ່ນີ້.
[33]ບໍ່ຫ່ອນມີຜູ້ໃດ, ເມື່ອໄຕ້ໂຄມແລ້ວຈະຕັ້ງໄວ້ໃນຕູ້ທີ່ລັບມິດ ຫລືເອົາບຸງມາກວບໄວ້ ແຕ່ເຄີຍຕັ້ງໄວ້ເທິງເຄື່ອງຮອງຕີນໂຄມ
ເພື່ອຜູ້ທີ່ເຂົ້າມາຈະໄດ້ເຫັນແສງສະຫວ່າງ.[34]ຕາຂອງທ່ານເປັນດວງສະຫວ່າງຂອງຮ່າງກາຍ ເມື່ອຕານັ້ນດີຮ່າງກາຍຂອງທ່ານກໍສະ-
ຫວ່າງໄປເຫມືອນກັນ, ແຕ່ເມື່ອຕາຂອງທ່ານມືດໄປ ຮ່າງກາຍຂອງທ່ານກໍຈະມືດໄປເຫມືອນກັນ.[35]ເຫດສັນນັ້ນ ຈົ່ງຣະວັງຢ່າໃຫ້ແສງສະ-
ຫວ່າງທີ່ມີຢູ່ໃນທ່ານມືດໄປ.[36]ຖ້າຮ່າງກາຍຂອງທ່ານທຸກສ່ວນເຕັມດ້ວຍຄວາມສະຫວ່າງ
ທັງຕົວກໍຈະສະຫວ່າງໄປດ້ວຍຮ່າງກາຍຂອງທ່ານທັງຫມົດຈະເປັນເຫມືອນແສງໂຄມໄຟນັ້ນ ທີ່ສ່ອງສະຫວ່າງແກ່ທ່ານ.”
[37]ເມື່ອພຣະເຢຊູເຈົ້າກ່າວສຳເລັດແລ້ວ ມີຟາຣີຊາຍຜູ້ຫນຶ່ງໄດ້ທູນເຊີນພຣະອົງໄປຮັບປະທານອາຫານທີ່ເຮືອນຂອງຕົນ
ເມື່ອພຣະເຢຊູເຈົ້າໄປເຖິງແລະຊົງນັ່ງອີງຕົວລົງ.[38]ຟາຣີຊາຍຜູ້ນັ້ນກໍປະຫລາດໃຈ ທີ່ພຣະອົງບໍ່ໄດ້ລ້າງມືກ່ອນຈະຮັບປະທານອາຫານແລງ.

[39]ແລ້ວອົງພຣະຜູ້ເປັນເຈົ້າກ່າວແກ່ລາວວ່າ, “ບັດນີ້, ເຈົ້າພວກຟາຣີຊາຍ, ເຈົ້າລ້າງຖ້ວຍຊາມໃຫ້ສະອາດແຕ່ຂ້າງນອກ
ແຕ່ຂ້າງໃນຕົວເຈົ້າເຕັມໄປດ້ວຍຄວາມໂລບແລະຄວາມຊົ່ວຮ້າຍ.[40]ໂອ ຄົນໂງ່ເອີຍ! ຜູ້ທີ່ໄດ້ສ້າງຂ້າງນອກກໍໄດ້ສ້າງຂ້າງໃນເຫມືອນກັນບໍ່ແມ່ນບໍ?
[41]ຈົ່ງບໍຣິຈາກແກ່ຄົນທຸກຍາກດ້ວຍສິ່ງຊຶ່ງຢູ່ຂ້າງໃນ ແລ້ວທຸກສິ່ງກໍຈະສະອາດສຳລັບພວກທ່ານ.
[42]ແຕ່ວິບັດແກ່ເຈົ້າ, ພວກຟາຣີຊາຍ ພວກເຈົ້າຖວາຍຫນຶ່ງສ່ວນສິບໃນເຄື່ອງປູກຕາມຣະດູການແກ່ພຣະເຈົ້າຄືຜັກກ້ານກຳ ຜັກແພວ,
ແລະຜັກອື່ນໆ ຈາກສວນ ແຕ່ພວກເຈົ້າໄດ້ລະເລີຍຄວາມຍຸດຕິທັມແລະຄວາມຮັກຂອງພຣະເຈົ້າ
ຈຳເປັນຢ່າງຍິ່ງທີ່ຈະປະຕິບັດຢ່າງຄົນທີ່ມີຄວາມຍຸດຕິທັມແລະຮັກພຣະເຈົ້າ ໂດຍບໍ່ບົກພ່ອງໃນການເຮັດສິ່ງອື່ນໆດ້ວຍ.
[43]ແຕ່ວິບັດແກ່ເຈົ້າ, ພວກຟາຣີຊາຍ ພວກເຈົ້າມັກບ່ອນນັ່ງອັນມີກຽດໃນໂຮງທັມະສາລາ ແລະມັກໃຫ້ຄົນຄຳນັບໃຫ້ກຽດໃນຕະຫລາດ.[44]ວິ-
ບັດແກ່ພວກເຈົ້າ, ເຫມືອນຂຸມຝັງສົບທີ່ຄົນທັງຫລາຍກໍຫຽວຜ່ານໄປມາໂດຍບໍ່ຮູ້ ເພາະບໍ່ໄດ້ຕິດປ້າຍບອກໄວ້.”
[45]ແລ້ວມີຄົນຫນຶ່ງໃນທັມະບັນດິດ ຕອບພຣະອົງວ່າ, “ອາຈານເອີຍ, ທ່ານກຳລັງຫມິ່ນປະຫມາດພວກເຮົາເຫມືອນກັນ.”[46]ພຣະເຢຊູເຈົ້າຕອບວ່າ,
“ແຕ່ວິບັດຈະມີແກ່ພວກເຈົ້າເຫມືອນກັນ, ພວກທັມະບັນດິດ ພວກເຈົ້າເອົາພາຣະທີ່ຫນັກຫນາມາວາງໃສ່ບ່າຂອງຜູ້ອື່ນ, ແຕ່ສ່ວນພວກເຈົ້າເອງ,
ແມ່ນແຕ່ນິ້ວມືດຽວກໍບໍ່ແຕະພາຣະນັ້ນ.
[47]ວິບັດແກ່ພວກເຈົ້າ, ທີ່ມັກສ້າງອຸບໂມງເທິງຫລຸມຝັງສົບຂອງພວກຜູ້ປະກາດພຣະທັມ, ທີ່ພວກບັນພະບຸຣຸດຂອງເຈົ້າໄດ້ຂ້າພວກເຂົາ.
[48]ພວກເຈົ້າໄດ້ເປັນພະຍານແລະເຫັນດີກັບບັນພະບຸດຣຸດຂອງພວກເຈົ້າ ເພາະພວກເຂົາໄດ້ຂ້າພວກຜູ້ປະກາດພຣະທັມ
ທີ່ພວກເຈົ້າໄດ້ສ້າງອຸບໂມງໃຫ້ແກ່ພວກເຂົາ.
[49]ດ້ວຍເຫດນີ້ ພຣະປັນຍາຂອງພຣະເຈົ້າຈຶ່ງຊົງກ່າວວ່າ, ‘ເຮົາຈະໃຊ້ພວກຜູ້ປະກາດພຣະທັມແລະອັກຄະສາວົກໄປຫາພວກເຂົາ
ແລະພວກເຂົາຈະຂ້າບາງຄົນແລະຂົ່ມເຫັງບາງຄົນ.[50]ຄົນໃນຍຸກນີ້ຈະຕ້ອງຮັບຜິດຊອບ ໃນເລືອດຂອງພວກຜູ້ປະກາດພຣະທັມແລະອັກຄະສາ-
ວົກເຫລົ່ານັ້ນ ທີ່ໄຫລອອກຕັ້ງແຕ່ແຮກສ້າງໂລກ.[51]ຕັ້ງແຕ່ເລືອດຂອງອາເບັນຈົນເຖິງເລືອດຂອງຊາຂາຣີຢາ ຜູ້ທີ່ຖືກຂ້າທີ່ແທ່ນບູຊາແລະທີ່ລີ້ລັບ.
ຈິງແທ້, ເຮົາບອກເຈົ້າໃນເລື່ອງນີ້ ເພາະຄົນໃນຍຸກນີ້ຈະຕ້ອງຮັບຜິດຊອບ.
[52]ວິບັດແກ່ພວກເຈົ້າ, ທັມະບັນດິດຂອງຄົນຍິວ ເພາະທ່ານໄດ້ເອົາກະແຈແຫ່ງຄວາມຮູ້ນັ້ນໄປເສັຍ ພວກເຈົ້າເອງກໍບໍ່ເຂົ້າໄປແລະຄົນທີ່ຢາກເຂົ້າໄປ
ພວກເຈົ້າກໍປິດເສັຍຈາກເຂົາ.”
[53]ຫລັງຈາກທີ່ພຣະເຢຊູເຈົ້າສະເດັດອອກຈາກທີ່ນັ້ນ, ພວກທັມະຈານແລະພວກຟາຣີຊາຍໄດ້ໂຈມຕີແລະໂຕ້ຖຽງກັບພຣະອົງອີກຫລາຍເລື່ອງ.
[54]ຫວັງຈະໃຫ້ພຣະອົງຕິດກັບດັກຈາກຄຳເວົ້າຂອງພຣະອົງ.


generated on Tue Jun 17 19:01:42 2025

12 [1]ໃນເວລານັ້ນ ມີປະຊາຊົນຫລາຍພັນຄົນມາເຕົ້າໂຮມກັນ ຫລາຍຈົນພວກເຂົາບຽດຢຽບກັນ, ພຣະເຢຊູເຈົ້າຕັ້ງຕົ້ນກ່າວກັບພວກສາວົກວ່າ,
"ຈົ່ງຣະວັງເຊື້ອແປ້ງຂອງພວກຟາຣີຊາຍ ຄືຄວາມຫນ້າຊື່ໃຈຄົດຂອງພວກເຂົາ.

[2]ບໍ່ມີຄວາມລັບໃດປົກບັງໄວ້ທີ່ຈະບໍ່ເປີດເຜີຍ ຫລືສິ່ງລັບທີ່ບໍ່ປະກົດໃຫ້ຮູ້.[3]ບໍ່ວ່າສິ່ງໃດທີ່ທ່ານເວົ້າໃນບ່ອນມືດ ກໍໄດ້ຍິນໃນບ່ອນແຈ້ງ
ແລະສິ່ງທີ່ພວກທ່ານຊຶມໃສ່ຫູໃນຫ້ອງຊັ້ນໃນ ກໍຈະຕ້ອງປ່າວປະກາດເທິງຫລັງຄາເຮືອນ.
[4]ເຮົາບອກທ່ານທັງຫລາຍທີ່ເປັນມິດສະຫາຍຂອງເຮົາວ່າ, ຢ່າຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແລະບໍ່ສາມາດທີ່ຈະເຮັດອັນໃດໄດ້ອີກຕໍ່ໄປ.
[5]ແຕ່ເຮົາຢາກຈະເຕືອນໃຫ້ພວກທ່ານຮູ້ວ່າຄວນຢ້ານຜູ້ໃດ. ຈົ່ງຢ້ານຜູ້ທີ່ຖືກຂ້າຊຶ່ງພາຍຫລັງມີອຳນາດທີ່ຈະຖິ້ມທ່ານລົງໃນນະຮົກໄດ້, ນັ້ນແຫລະ
ເຮົາບອກພວກທ່ານວ່າ ຈົ່ງຢ້ານຜູ້ນັ້ນ.
[6]ນົກກຈອກຫ້າໂຕເຂົາຂາຍສອງອັດບໍ່ແມ່ນບໍ? ແລະນົກນັ້ນ, ແມ່ນແຕ່ໂຕດຽວກໍບໍ່ຢູ່ນອກສາຍຕາຂອງພຣະເຈົ້າ.
[7]ແມ່ນແຕ່ເສັ້ນຜົມເທິງຫົວຂອງທ່ານກໍຊົງນັບໄວ້ແລ້ວທຸກເສັ້ນ ຢ່າຊູ່ຢ້ານເລີຍ. ພວກທ່ານກໍປະເສີດກວ່ານົກກຈອກຢ່າງຫລວງຫລາຍ.
[8]ເຮົາບອກແກ່ທ່ານວ່າ ທຸກຄົນທີ່ຍອມຮັບເຮົາຕໍ່ຫນ້າມະນຸດ ບຸດມະນຸດກໍຈະຍອມຮັບຜູ້ນັ້ນຕໍ່ຫນ້າພວກເທວະດາຂອງພຣະເຈົ້າເຫມືອນກັນ.
[9]ແຕ່ຜູ້ໃດຈະປະຕິເສດເຮົາຕໍ່ຫນ້າມະນຸດ ກໍຈະຖືກປະຕິເສດຕໍ່ຫນ້າພວກເທວະດາຂອງພຣະເຈົ້າເຫມືອນກັນ.[10]ຜູ້ໃດທີ່ຈະກ່າວຕໍ່ສູ້ບຸດມະ-
ນຸດຈະໄດ້ຮັບການອະພັຍ ແຕ່ຜູ້ໃດທີ່ກ່າວຄຳຫມິ່ນປະຫມາດຕໍ່ພຣະວິນຍານບໍຣິສຸດເຈົ້າ ບໍ່ອາດຈະໂຜດອະພັຍໃຫ້ໄດ້.
[11]ເມື່ອພວກເຂົານຳພວກທ່ານໄປຢູ່ຕໍ່ຫນ້າໃນທັມະສາລາ, ຕໍ່ຫນ້າຜູ້ປົກຄອງແລະຜູ້ມີອຳນາດ, ຢ່າຄຶດອຸກໃຈວ່າຈະແກ້ຕົວຢ່າງໃດ
ຫລືຈະເວົ້າຫຍັງ.[12]ເພາະໃນໂມງນັ້ນພຣະວິນຍານບໍຣິສຸດເຈົ້າຈະຊົງໂຜດສອນທ່ານໃນສິ່ງທີ່ຄວນຈະເວົ້າ.
[13]ຈາກນັ້ນ ມີບາງຄົນໃນຫມູ່ປະຊາຊົນໄດ້ທູນພຣະເຢຊູເຈົ້າວ່າ, "ອາຈານເອີຍ, ຊ່ວຍບອກອ້າຍຂອງຂ້າ-
ນ້ອຍແບ່ງມໍຣະດົກໃຫ້ຂ້ານ້ອຍແດ່."[14]ພຣະເຢຊູເຈົ້າຕອບວ່າ, "ຊາຍເອີຍ,
ໃຜໄດ້ຕັ້ງເຮົາໃຫ້ເປັນຜູ້ພິພາກສາຫລືເປັນຜູ້ແບ່ງປັນມໍຣະດົກໃຫ້ທ່ານ?"[15]ແລະພຣະອົງບອກພວກເຂົາວ່າ, "ຈົ່ງຣະວັງຮັກ-
ສາຕົນໄວ້ໃຫ້ເວັ້ນຈາກການໂລບທຸກຢ່າງ ເພາະຊີວິດຂອງມະນຸດບໍ່ຂຶ້ນຢູ່ກັບຊັບສິນບັດອັນອຸດົມສົມບູນຂອງຕົນ."
[16]ຈາກນັ້ນ ພຣະເຢຊູເຈົ້າຈຶ່ງບອກກັບພວກເຂົາດ້ວຍຄຳອຸປະມາວ່າ, "ມີເສດຖີຄົນຫນຶ່ງໄດ້ຜົນຜະລິດຈຳນວນຫລາຍ.
[17]ແລະລາວຄຶດກັບຕົນເອງວ່າ 'ເຮົາຈະເຮັດແນວໃດດີ ເພາະບໍ່ມີບ່ອນຈະເກັບຜົນລະ-
ປູກຂອງເຮົາແລ້ວ?'[18]ເພິ່ນຈຶ່ງເວົ້າວ່າ 'ສິ່ງທີ່ເຮົາຈະເຮັດຄືດັ່ງນີ້ ເຮົາຈະມ້າງເລົ້າທັງຫລາຍອອກແລະຈະສ້າງຫລັງໃຫມ່ໃຫ້ໃຫຍ່ກວ່າເກົ່າ
ແລ້ວເຮົາຈະຮວບຮວມເຂົ້າ ແລະສິ່ງຂອງທັງຫມົດຂອງເຮົາໄວ້ທີ່ນັ້ນ.[19]ເຮົາຈະເວົ້າແກ່ຈິດໃຈຂອງເຮົາວ່າ, "ຈິດໃຈເອີຍ, ເຈົ້າມີເຂົ້າ-
ຂອງເກັບໄວ້ໃຊ້ໄດ້ອີກຫລາຍປີ. ຈົ່ງພັກຢູ່ສະບາຍ, ກິນແລະດື່ມດ້ວຍຄວາມປິຕິຍິນດີສະຫນຸກສະຫນານເທາະ'."
[20]ແຕ່ພຣະເຈົ້າກ່າວແກ່ລາວວ່າ 'ໂອຄົນໂງ່ເອີຍ, ໃນຄືນວັນນີ້ເຂົາຈະເອີ້ນເອົາຈິດໃຈຂອງເຈົ້າໄປຈາກເຈົ້າ
ແລ້ວສິ່ງຂອງທັງຫລາຍທີ່ເຈົ້າຈັດແຈ່ງໄວ້ນັ້ນຈະຕົກເປັນຂອງໃຜ?'.[21]ນັ້ນກໍເຫມືອນຄົນທີ່ທ້ອນໂຮມຊັບສົມບັດໄວ້ສຳລັບຕົນເອງ
ແຕ່ບໍ່ໄດ້ຮັ່ງມີຕໍ່ພຣະຈົ້າ."
[22]ພຣະເຢຊູເຈົ້າກ່າວກັບພວກສາວົກຂອງພຣະອົງວ່າ, "ດັ່ງນັ້ນ ເຮົາບອກທ່ານທັງຫລາຍວ່າ ຢ່າກະວົນກະວາຍເຖິງຊີວິດວ່າຈະກິນຫຍັງ
ຫລືເຖິງຮ່າງກາຍວ່າຈະນຸ່ງຫົ່ມຫຍັງ?[23]ເພາະຊີວິດກໍມີຄ່າກວ່າອາຫານ ແລະຮ່າງກາຍກໍມີຄ່າກວ່າເຄື່ອງນຸ່ງຫົ່ມ.
[24]ຈົ່ງພິຈາຣະນາເບິ່ງຝູງກາ ມັນບໍ່ໄດ້ຫວ່ານຫລືກ່ຽວ, ມັນບໍ່ມີເລົ້າຫລືບ່ອນເກັບເຄື່ອງ ແຕ່ພຣະເຈົ້າຍັງຊົງລ້ຽງພວກມັນ ພວກທ່ານປະ-
ເສີດກວ່ານົກເຫົ່ລານັ້ນ.[25]ແລະມີຄວາມກະວົນກະວາຍໃດ ທີ່ອາດຕໍ່ຊີວິດໃຫ້ຍາວອອກໄປຈັກສອກຫນຶ່ງໄດ້?[26]ຖ້າສິ່ງເລັກນ້ອຍທ່ານຍັງເຮັດບໍ່ໄດ້
ເຫດໃດທ່ານຈຶ່ງກະວົນກະວາຍເຖິງສິ່ງອື່ນໆ ອີກ?
[27]ຈົ່ງພິຈາຣະນາເບິ່ງດອກລີລີວ່າມັນເຕີບໃຫຍ່ຂຶ້ນຢ່າງໃດ ມັນບໍ່ໄດ້ເຮັດການ, ມັນບໍ່ໄດ້ເຂັນຝ້າຍ ແຕ່ເຮົາບອກທ່ານທັງຫລາຍວ່າ ເຖິງແມ່ນກະ-
ສັດໂຊໂລໂມນເມື່ອບໍຣິບູນດ້ວຍສະຫງ່າຣາສີ ກໍບໍ່ໄດ້ທົງເຄື່ອງງາມທໍ່ດອກໄມ້ນີ້ດອກຫນຶ່ງ.
[28]ຖ້າພຣະເຈົ້າຊົງຕົກແຕ່ງຫຍ້າທີ່ທົ່ງນາຢ່າງນັ້ນຊຶ່ງເປັນຢູ່ວັນນີ້ ແລະມື້ອື່ນຕ້ອງຖິ້ມໃສ່ເຕົາໄຟເສັຍ ພຣະອົງຈະບໍ່ຕົກ-
ແຕ່ງພວກທ່ານຫລາຍກວ່ານັ້ນເທົ່າໃດ? ໂອ ທ່ານຜູ້ມີຄວາມເຊື່ອຫນ້ອຍເອີຍ.
[29]ຢ່າສະແຫວງຫາວ່າຈະກິນຫຍັງ, ແລະຈະດື່ມຫຍັງ, ແລະຢ່າກະວົນກະວາຍ.[30]ເພາະບັນດາປະຊາຊາດທົ່ວໂລກຊອກຫາສິ່ງຂອງທັງປວງນີ້
ແລະພຣະບິດາເຈົ້າຂອງພວກທ່ານກໍຊົງຊາບແລ້ວວ່າທ່ານຕ້ອງການສິ່ງເຫລົ່ານີ້.
[31]ແຕ່ຈົ່ງສະແຫວງຫາຣາຊະອານາຈັກຂອງພຣະເຈົ້າ ແລ້ວສິ່ງເຫລົ່ານີ້ພຣະອົງຈະຊົງເພີ່ມເຕີມໃຫ້ທ່ານ.[32]ຢ່າຊູ່ຢ້ານເລີຍ ຝູງແກະນ້ອຍເອີຍ,
ເພາະພຣະບິດາເຈົ້າຂອງພວກທ່ານຊົງພໍພຣະທັຍຈະປຣະທານຣາຊະອານາຈັກໃຫ້ແກ່ພວກທ່ານ.
[33]ຈົ່ງຂາຍຊັບສິນບັດຂອງທ່ານແລະແຈກຈ່າຍໃຫ້ກັບຄົນຍາກຈົນ. ຈົ່ງເຮັດຖົງເງິນອັນບໍ່ຮູ້ເກົ່າໄວ້ສຳລັບຕົນ ຄືຊັບສົມ-
ບັດໃນສະຫວັນຊຶ່ງບໍ່ຮູ້ຈັກຫມົດ ບ່ອນທີ່ໂຈນເຂົ້າໄປໃກ້ບໍ່ໄດ້ແລະບ່ອນທີ່ມອດທຳລາຍບໍ່ໄດ້.[34]ເພາະວ່າຊັບສົມບັດຂອງທ່ານຢູ່ທີ່ໃດ
ໃຈຂອງທ່ານກໍຢູ່ທີ່ນັ້ນດ້ວຍ.
[35]ຈົ່ງຮັດແອວເສື້ອຄຸມຂອງທ່ານໄວ້ ແລະໄຕ້ໂຄມຂອງທ່ານໃຫ້ສະຫວ່າງຢູ່ສະເຫມີ.
[36]ແລະຈົ່ງເປັນເຫມືອນກັບຄົນທີ່ຄອຍເຈົ້ານາຍຂອງຕົນກັບມາຈາກການສະຫລອງແຕ່ງງານ ດັ່ງນັ້ນ ເມື່ອເຈົ້ານາຍກັບມາແລະເຄາະປະຕູແລ້ວ
ພວກເຂົາຈະໄຂໃຫ້ກັບເຈົ້ານາຍໃນທັນທີ.
[37]ພຣະພອນຈົ່ງມີແກ່ຜູ້ຮັບໃຊ້ເຫລົ່ານີ້ຊຶ່ງນາຍກັບມາແລະພົບວ່າພວກເຂົາກຳລັງຄອຍຖ້າຢູ່. ເຮົາບອກຄວາມຈິງແກ່ພວກທ່ານວ່າ,
ນາຍຈະຮັດແອວຂອງຕົນໄວ້ແລະໃຫ້ພວກຜູ້ຮັບໃຊ້ນັ່ງຮ່ວມໂຕະອາຫານ ແລະເພິ່ນຈະມາບົວຣະບັດເຂົາ.
[38]ຖ້າເຈົ້ານາຍເຂົ້າມາໃນຕອນທ່ຽງຄືນຫລືຂ້ອນແຈ້ງ ແລະເຫັນວ່າພວກຮັບໃຊ້ຕຽມພ້ອມຢູ່ ພຣະພອນຈົ່ງມີແກ່ຜູ້ຮັບໃຊ້ເຫລົ່ານັ້ນ
[39]ຍິ່ງກວ່ານັ້ນ ຈົ່ງຮູ້ວ່າ ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນວ່າໂຈນຈະມາໃນໂມງໃດ, ຕົນຈະບໍ່ປະໃຫ້ໂຈນເຈາະເຂົ້າເຮືອນໄດ້.
[40]ພວກເຈົ້າກໍເຫມືອນກັນຈົ່ງຕຽມພ້ອມຢູ່ສະເຫມີ ເພາະໃນໂມງທີ່ພວກທ່ານບໍ່ຄາດຄິດນັ້ນ ບຸດມະນຸດຈະສະເດັດມາ.
[41]ເປໂຕຈຶ່ງທູນວ່າ, "ອົງພຣະຜູ້ເປັນເຈົ້າເອີຍ, ພຣະອົງກຳລັງບອກຄຳອຸປະມານີ້ແກ່ພວກຂ້ານ້ອຍ ຫລືແກ່ຄົນທຸກຄົນ?"[42]ອົງພຣະຜູ້ເປັນ-
ເຈົ້າກ່າວວ່າ, "ໃຜເປັນຜູ້ຈັດການທີ່ສັດຊື່ແລະມີສະຕິປັນຍາ ທີ່ນາຍໄດ້ຕັ້ງໃຫ້ເປັນໃຫຍ່ເຫນືອຄົນໃຊ້ອື່ນໆ ເພື່ອແຈກຈ່າຍສ່ວນແບ່ງອາ-


generated on Tue Jun 17 19:01:42 2025

ຫານໃຫ້ຕາມເວລາ?[43]ພຣະພອນມີແກ່ຄົນຮັບໃຊ້ນັ້ນ ຜູ້ທີ່ເຈົ້ານາຍຂອງເຂົາພົບວ່າກຳລັງເຮັດຢ່າງນັ້ນຢູ່ເມື່ອເຈົ້ານາຍເຂົ້າມາ.
[44]ເຮົາບອກຄວາມຈິງແກ່ພວກທ່ານວ່າ ເຈົ້ານາຍຈະຕັ້ງຜູ້ນັ້ນໃຫ້ດູແລຊັບສົມບັດທັງຫມົດທີ່ມີຢູ່.
[45]ແຕ່ຖ້າຄົນຮັບໃຊ້ຄິດວ່າ'ນາຍຂອງເຮົາຈະກັບມາຊ້າ' ແລ້ວກໍຕັ້ງຕົ້ນທຸບຕີພວກຄົນໃຊ້ຊາຍຍິງ ທັງກິນແລະດື່ມຈົນເມົາ.[46]ເຈົ້າ
ນາຍຂອງຄົນຮັບໃຊ້ນັ້ນກັບມາໃນວັນທີ່ເຂົາບໍ່ຄາດຄິດ, ແລະໃນໂມງທີ່ເຂົາບໍ່ຮູ້. ຜູ້ເປັນນາຍຈະຜ່າມັນໃຫ້ເປັນທ່ອນໆ,
ແລະໃຫ້ເຂົາໄປຢູ່ໃນສະຖານທີ່ຫນຶ່ງກັບຄົນທີ່ບໍ່ເຊື່ອຟັງ.
[47]ຄົນຮັບໃຊ້ນັ້ນ ທີ່ຮູ້ເຖິງຄວາມຕັ້ງໃຈຂອງເຈົ້ານາຍຂອງຕົນແລະບໍ່ໄດ້ຕຽມຕົວໄວ້ ຫລືບໍ່ໄດ້ເຮັດໃຫ້ຄວາມຕັ້ງໃຈຂອງເຈົ້ານາຍສຳເລັດ
ຈະຕ້ອງຖືກຂ້ຽນຕີຢ່າງຫນັກ.[48]ແຕ່ຜູ້ທີ່ບໍ່ຮູ້ ແລະໄດ້ເຮັດສິ່ງທີ່ສົມຄວນຖືກຂ້ຽນຕີ ກໍຈະຖືກຂ້ຽນຫນ້ອຍ
ຜູ້ໃດໄດ້ຮັບຫລາຍກໍຈະທວງເອົາຈາກຜູ້ນັ້ນຫລາຍ ສ່ວນຜູ້ທີ່ໄດ້ຮັບຝາກໄວ້ຫລາຍເພີ່ນຈະທວງເອົາຈາກຜູ້ນັ້ນຫລາຍເຊັ່ນກັນ.
[49]ເຮົາມາເພື່ອໂຍນໄຟລົງເທິງແຜ່ນດິນໂລກ, ແລະ ໄຟທີ່ເຮົາປາຖນາກໍໄດ້ຖືກຈູດໃຫ້ລຸກແລ້ວ.[50]ແຕ່ເຮົາຈະຕ້ອງຮັບບັບຕິສະ-
ມາຢ່າງຫນຶ່ງທີ່ທໍຣະມານ ແລະຕ້ອງເຈັບປວດຈົນກວ່າຈະສຳເລັດ.
[51]ພວກທ່ານຄິດວ່າເຮົາມາເພື່ອໃຫ້ເກີດຄວາມສະຫງົບສຸກໃນໂລກບໍ? ບໍ່ແມ່ນດອກ ເຮົານຳຄວາມແຕກແຍກມາໃຫ້ຕ່າງຫາກ.[52]ຕັ້ງ-
ແຕ່ນີ້ເປັນຕົ້ນໄປ ຄອບຄົວຫນຶ່ງທີ່ມີຫ້າຄົນໃນເຮືອນດຽວຈະແຕກແຍກກັນຄື ສາມຄົນຈະຕໍ່ສູ້ສອງຄົນ ແລະສອງຄົນຈະຕໍ່ສູ້ກັບຄົນສາມຄົນ.
[53]ພວກເຂົາຈະຖືກແບ່ງແຍກກັນ, ພໍ່ຈະຕໍ່ສູ້ກັບລູກຊາຍແລະລູກຊາຍຈະຕໍ່ສູ້ກັບພໍ່; ແມ່ຈະຕໍ່ສູ້ກັບລູກສາວແລະລູກສາວຈະຕໍ່ສູ້ກັບແມ່,
ແມ່ຍ່າຈະຕໍ່ສູ້ລູກໃພ້ແລະລູກໃພ້ຈະຕໍ່ສູ້ແມ່ຍ່າ."
[54]ພຣະເຢຊູເຈົ້າກ່າວກັບປະຊາຊົນອີກວ່າ, "ເມື່ອທ່ານເຫັນເມກກຳລັງຂຶ້ນທາງທິດຕາເວັນຕົກ ທ່ານກໍເວົ້າທັນທີວ່າຝົນກຳລັງຈະຕົກ
ແລະມັນກໍເປັນຢ່າງນັ້ນແທ້.[55]ແລະເມື່ອລົມໃຕ້ກຳລັງພັດ ທ່ານເວົ້າວ່ານັ້ນຄືລົມຮ້ອນເອົ້າທີ່ກຳລັງແຜດເຜົາ, ແລະມັນກໍເປັນຢ່າງນັ້ນແທ້.[56]ໂອ
ຄົນຫນ້າຊື່ໃຈຄົດ, ທ່ານຮູ້ສັງເກດຄວາມເປັນໄປທີ່ເກີດຂຶ້ນຂອງແຜ່ນດິນໂລກແລະທ້ອງຟ້າອາກາດ,
ແຕ່ເພາະເຫດໃດພວກທ່ານບໍ່ຮູ້ສັງເກດຄວາມເປັນໄປຂອງປະຈຸບັນນີ້ວ່າເປັນຢ່າງໃດ?
[57]ເຫດໃດທ່ານຈຶ່ງບໍ່ຕັດສິນວ່າສິ່ງໃດເປັນສິ່ງຖືກຕ້ອງດ້ວຍຕົວຂອງທ່ານເອງ?[58]ເມື່ອເຈົ້າກັບໂຈດພາກັນໄປຫາຜູ້ປົກຄອງ ລະຫວ່າງທາງຈົ່ງພະຍາ-
ຍາມຫາຊ່ອງທາງປອງດອງກັນ, ເພື່ອວ່າໂຈດຈະບໍ່ລາກເຈົ້າເຂົ້າໄປຫາຕຸລາການ ແລະເພື່ອວ່າຕຸລາການຈະບໍ່ມອບເຈົ້າ
ໃຫ້ແກ່ເຈົ້າຫນ້າທີ່ແລະເຈົ້າຫນ້າທີ່ຈະບໍ່ຂັງເຈົ້າໄວ້ໃນຄຸກ.[59]ເຮົາບອກແກ່ທ່ານວ່າ ທ່ານຈະບໍ່ໄດ້ອອກຈາກທີ່ນັ້ນ ຈົນກວ່າຈະໄດ້ໃຊ້ຫນີ້ໃຫ້ຈົນຄົບ.

13 [1]ໃນຂະນະນັ້ນ ມີລາງຄົນຢູ່ທີ່ນັ້ນໄດ້ເລົ່າສູ່ພຣະເຢຊູເຈົ້າຟັງເລື່ອງຊາວຄາລີເລ ທີ່ປີລາດໄດ້ເອົາເລືອດຂອງພວກເຂົາປົນກັບເຄື່ອງບູ-
ຊາຂອງພວກເຂົາເອງ.[2]ພຣະເຢຊູເຈົ້າຕອບພວກເຂົາວ່າ, "ທ່ານຄິດວ່າຊາວຄາລີເລເຫລົ່ານັ້ນເປັນຄົນບາບລື່ນກວ່າຊາວຄາລີເລພວກອື່ນໆ
ທຸກຄົນ ເພາະວ່າພວກເຂົາທົນທຸກລຳບາກຢ່າງນີ້ບໍ?[3]ເຮົາບອກທ່ານວ່າ ບໍ່ແມ່ນດອກ ແຕ່ຖ້າພວກທ່ານບໍ່ຖິ້ມໃຈເກົ່າເອົາໃຈໃຫມ່
ພວກທ່ານກໍຈະຈິບຫາຍໄປເຊັ່ນດຽວກັນ.

[4]ຫລືຄົນທັງສິບແປດຄົນທີ່ຕາຍ ເພາະຖືກປ້ອມພັງລົງມາທັບພວກເຂົາໃນຊີໂລອາມ
ທ່ານຄຶດວ່າພວກເຂົາເຫລົ່ານັ້ນເປັນຄົນຜິດລື່ນກວ່າຄົນທັງປວງທີ່ອາໄສຢູ່ໃນກຸງເຢຣູຊາເລັມບໍ?[5]ເຮົາບອກທ່ານທັງຫລາຍວ່າ ບໍ່ແມ່ນດອກ
ແຕ່ຖ້າພວກທ່ານຫມົດທຸກຄົນບໍ່ຖິ້ມໃຈເກົ່າເອົາໃຈໃຫມ່ ກໍຈະຈິບຫາຍໄປເຫມືອນກັນ."
[6]ພຣະເຢຊູເຈົ້າຊົງກ່າວຄຳອຸປະມາວ່າ, ມີ"ຄົນຫນຶ່ງໄດ້ປູກຕົ້ນເດື່ອເທດໄວ້ໃນສວນອະງຸ່ນຂອງຕົນ ແລ້ວເຂົ້າມາຊອກຫາຫມາກເດື່ອໃນຕົ້ນນັ້ນ
ແຕ່ກໍບໍ່ພົບເລີຍ.[7]ຊາຍຄົນນັ້ນຈຶ່ງບອກກັບຄົນງານໃນສວນອະງຸ່ນນັ້ນວ່າ 'ເບິ່ງແມ, ເຮົາມາຊອກຫາຫມາກເດື່ອໃນຕົ້ນນີ້ໄດ້ສາມປີແລ້ວ
ແຕ່ກໍບໍ່ພົບເລີຍ ຈົ່ງປ້ຳຖິ້ມເສັຽ ຈະເອົາໄວ້ຮົກດິນລ້າເຮັດຫຍັງ?'
[8]ແຕ່ຄົນງານຕອບວ່າ 'ຂໍປະມັນໄວ້ອີກຕື່ມປີຫນຶ່ງກ່ອນ ແລະຂ້ານ້ອຍຈະຂຸດດິນອ້ອມເອົາຝຸ່ນໃສ່.[9]ຖ້າມັນເກີດຫມາກປີຫນ້າກໍດີຢູ່, ແຕ່ຖ້າບໍ່-
ເກີດຫມາກຈຶ່ງປ້ຳມັນຖິ້ມເສັຽ!'"
[10]ພຣະເຢຊູເຈົ້າຊົງສັ່ງສອນຢູ່ໃນທັມະສາລາ ບ່ອນຫນຶ່ງໃນວັນສະບາໂຕ.[11]ເບິ່ງແມ, ມີຍິງຄົນຫນຶ່ງຢູ່ທີ່ນັ້ນ
ນາງຖືກວິນຍານແຫ່ງຄວາມອ່ອນແອເຂົ້າສິງຢູ່ເຮັດໃຫ້ເຈັບປ່ວຍມາເປັນເວລາສິບແປດປີແລ້ວ ມັນເຮັດໃຫ້ນາງຫລັງກົ່ງຢືນຊື່ບໍ່ໄດ້ຢ່າງເຕັມທີ.
[12]ເມື່ອພຣະເຢຊູເຈົ້າຊົງເຫັນນາງ ພຣະອົງຈຶ່ງເອີ້ນນາງມາ ແລະຊົງບອກວ່າ, "ນາງເອີຍ,
ເຈົ້າໄດ້ຮັບການປົດປ່ອຍຈາກຄວາມເຈັບປ່ວຍຂອງເຈົ້າແລ້ວ."[13]ພຣະອົງຊົງຢຽດພຣະຫັດວາງໃສ່ນາງ, ທັນໃດນັ້ນຕົວນາງກໍຢຽດຊື່
ແລະນາງກໍສັນຣະເສີນພຣະເຈົ້າ.[14]ແຕ່ນາຍທັມະສາລາບໍ່ພໍໃຈ ເພາະພຣະເຢຊູເຈົ້າໄດ້ຊົງໂຜດໃຫ້ດີພະຍາດໃນວັນສະບາໂຕ.
ດັ່ງນັ້ນລາວຈຶ່ງກ່າວແກ່ປະຊາຊົນວ່າ, "ມີຫົກວັນທີ່ຈັດໄວ້ສຳລັບເຮັດງານ ຈົ່ງມາຮັກສາໃຫ້ດີພະ-
ຍາດໃນວັນເຫລົ່ານັ້ນເຖີດ, ແຕ່ຢ່າມາໃນວັນສະບາໂຕ."
[15]ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, "ພວກຄົນຫນ້າຊື່ໃຈຄົດເອີຍ! ພວກເຈົ້າບໍ່ໄດ້ແກ້ງົວຫລືລໍຂອງຕົນ ຈູງອອກຈາກຄອກໄປກິນນ້ຳໃນວັນສະບາ-
ໂຕບໍ?[16]ເຊັ່ນດຽວກັນກັບຍິງຄົນນີ້ເປັນລູກສາວຂອງອັບຣາຮາມ ທີ່ຊາຕານໄດ້ຜູກມັດໄວ້ໄດ້ສິບແປດປີແລ້ວ ບໍ່ສົມ-
ຄວນທີ່ຈະໃຫ້ນາງພົ້ນຈາກເຄື່ອງຜູກມັດນີ້ໃນວັນສະບາໂຕບໍ?"
[17]ເມື່ອພຣະອົງກ່າວຄຳເຫລົ່ານີ້ແລ້ວ ບັນດາຄົນທີ່ຕໍ່ສູ້ພຣະອົງກໍໄດ້ຮັບຄວາມອັບອາຍ ແຕ່ປະຊາຊົນທັງຫລາຍກໍພາກັນຊົມຊື່ນຍິນດີ
ທີ່ພຣະອົງໄດ້ຊົງກະທຳທຸກສິ່ງທີ່ນ່າສັນຣະເສີນ.
[18]ແລ້ວພຣະເຢຊູເຈົ້າກ່າວອີກວ່າ, "ຣາຊະອານາຈັກຂອງພຣະເຈົ້າເຫມືອນສິ່ງໃດ, ເຮົາຈະປຽບຣາຊະອານາຈັກນັ້ນກັບສິ່ງໃດ?
[19]ກໍເປັນເຫມືອນແກ່ນຜັກກາດເມັດຫນຶ່ງ ທີ່ຄົນນຳໄປຫວ່ານໃນສວນຂອງຕົນ ມັນກໍງອກຂຶ້ນເປັນກົກໃຫຍ່
ແລະນົກປ່າກໍມາເຮັດຮັງອາໄສຢູ່ຕາມກິ່ງກ້ານຂອງມັນ."
[20]ພຣະເຢຊູເຈົ້າກ່າວຕໍ່ອີກວ່າ, "ເຮົາຈະປຽບຣາຊະອານາຈັກຂອງພຣະເຈົ້າກັບສິ່ງໃດດີ?
[21]ກໍປຽບເຫມືອນເຊື້ອແປ້ງທີ່ຜູ້ຍິງຄົນຫນຶ່ງໄດ້ເອົາປົນໃສ່ໃນແປ້ງສາມຖັງ ຈົນແປ້ງນັ້ນຟູຂຶ້ນທັງຫມົດ."
[22]ພຣະເຢຊູເຈົ້າໄດ້ສະເດັດໄປຕາມບ້ານເມືອງຕ່າງໆ ທີ່ຢູ່ລະຫວ່າງທາງທີ່ໄປສູ່ນະຄອນເຢຣູຊາເລັມ ແລະຊົງສັ່ງສອນພວກເຂົາ.
[23]ບາງຄົນທູນພຣະອົງວ່າ, "ອົງພຣະຜູ້ເປັນເຈົ້າ, ຜູ້ທີ່ຈະພົ້ນນັ້ນມີພຽງແຕ່ຫນ້ອຍຄົນເທົ່ານັ້ນບໍ?" ພຣະອົງຈຶ່ງຕອບພວກເຂົາວ່າ,
[24]"ຈົ່ງພຽນພະຍາຍາມທີ່ຈະເຂົ້າໄປທາງປະຕູຄັບແຄບ ເຮົາບອກທ່ານວ່າ ມີຫລາຍຄົນຈະພະຍາຍາມເຂົ້າໄປ ແຕ່ບໍ່ສາມາດທີ່ຈະເຂົ້າໄປໄດ້.
[25]ໃນວັນຫນຶ່ງ ເມື່ອເຈົ້າຂອງເຮືອນລຸກຂຶ້ນແລະອັດປະຕູແລ້ວ, ພວກທ່ານທັງຫລາຍຢືນຢູ່ຂ້າງນອກຕັ້ງຕົ້ນເຄາະປະຕູວ່າ 'ນາຍເອີຍ, ນາຍເອີຍ,
ຂໍໄຂໃຫ້ພວກຂ້ານ້ອຍເຂົ້າໄປຂ້າງໃນແດ່ທ້ອນ!' ແລະເຈົ້າເຮືອນຈະຕອບພວກທ່ານວ່າ 'ເຮົາບໍ່ຮູ້ຈັກເຈົ້າ ຫລືບໍ່ຮູ້ວ່າເຈົ້າມາແຕ່ໃສ?'.
[26]ແລ້ວພວກທ່ານຈະຕອບວ່າ 'ພວກຂ້ານ້ອຍໄດ້ກິນແລະດື່ມຕໍ່ຫນ້າທ່ານ ແລະທ່ານໄດ້ສັ່ງສອນໃນບ້ານເມືອງຂອງພວກຂ້ານ້ອຍ'.
[27]ຝ່າຍເຈົ້າຂອງເຮືອນນັ້ນຈະເວົ້າວ່າ 'ເຮົາບອກເຈົ້າວ່າ ເຮົາບໍ່ຮູ້ຈັກວ່າເຈົ້າມາແຕ່ໃສ, ຈົ່ງຖອຍໄປຈາກເຮົາເສັຍເຈົ້າຄົນຊົ່ວ.'
[28]ທີ່ນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຄຽ້ວຟັນ ເມື່ອທ່ານທັງຫລາຍຈະໄດ້ເຫັນອັບຣາຮາມ, ອີຊາກ, ແລະຢາໂຄບ ກັບບັນດາຜູ້ປະກາດພຣະ-
ທັມ ທຸກຄົນຢູ່ໃນຣາຊະອານາຈັກຂອງພຣະເຈົ້າ, ສ່ວນທ່ານຈະຖືກໂຍນອອກໄປຂ້າງນອກ.[29]ພວກເຂົາຈະມາຈາກທິດຕາເວັນອອກ, ທິດຕາເວັນ-
ຕົກ, ທິດເຫນືອ, ທິດໃຕ້ ແລະພັກສະບາຍໃນຣາຊະອານາຂອງພຣະເຈົ້າ.[30]ແລະເບິ່ງແມ! ຜູ້ທີ່ເປັນປາຍຈະກັບເປັນຕົ້ນ
ແລະຜູ້ທີ່ເປັນຕົ້ນຈະກັບເປັນປາຍ."
[31]ຫລັງຈາກນັ້ນບໍ່ດົນ ມີພວກຟາຣີຊາຍລາງຄົນມາຫາແລະທູນພຣະອົງວ່າ, "ຈົ່ງອອກໄປຈາກທີ່ນີ້ ເພາະກະສັດເຮໂຣດຊົງຢາກປະຫານຊີ-
ວິດທ່ານເສັຍ."[32]ພຣະເຢຊູເຈົ້າຊົງຕອບເຂົາວ່າ, "ຈົ່ງໄປບອກຫມາຈິກຈອກໂຕນັ້ນວ່າ 'ເບິ່ງແມ! ມື້ນີ້ແລະມື້-
ອື່ນເຮົາຈະຂັບໄລ່ຜີມານຮ້າຍອອກແລະເຮັດໃຫ້ດີພະຍາດ ແລ້ວວັນທີສາມເຮົາຈະເຖິງທີ່ສຳເລັດຕາມເປົ້າຫມາຍຂອງເຮົາ'.
[33]ບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ, ເຮົາຈຳເປັນຈະຕ້ອງດຳເນີນຕໍ່ໄປມື້ນີ້, ມື້ອື່ນ, ແລະຕໍ່ໆໄປ, ເພາະການທີ່ຈະຂ້າຜູ້ປະກາດພຣະທັມໃນນະຄອນເຢ-
ຣູຊາເລັມເປັນເລື່ອງທີ່ຍອມຮັບບໍ່ໄດ້.
[34]ເຢຣູຊາເລັມເອີຍ, ເຢຣູຊາເລັມເຈົ້າໄດ້ຂ້າບັນດາຜູ້ປະກາດພຣະທັມ ແລະເອົາຫີນຄວ່າງໃສ່ພວກຮັບໃຊ້ທີ່ໄດ້ສົ່ງມາເພື່ອເຈົ້າ.
ຫລາຍເທື່ອແລ້ວທີ່ເຮົາປາຖນາຈະຮວບຮວມລູກຂອງເຈົ້າ ເຫມືອນກັບແມ່ໄກ່ຮວບຮວມລູກໄວ້ໃຕ້ປີກຂອງມັນ,
ແຕ່ເຈົ້າບໍ່ຍິນຍອມໃຫ້ເປັນເຊັ່ນນັ້ນ.[35]ເບິ່ງແມ, ເຮືອນຂອງເຈົ້າຈະຖືກປະຖິ້ມໃຫ້ຮົກຮ້າງ. ເຮົາບອກພວກທ່ານວ່າ
ພວກທ່ານຈະບໍ່ໄດ້ເຫັນເຮົາອີກຈົນກວ່າພວກທ່ານຈະບອກວ່າ, 'ຂໍໃຫ້ທ່ານຜູ້ທີ່ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນ-
ເຈົ້າຈົ່ງຊົງພຣະຈະເຣີນ'."

 generated on Tue Jun 17 19:01:42 2025

14 [1]ໃນວັນສະບາໂຕເມື່ອພຣະເຢຊູເຈົ້າສະເດັດເຂົ້າໄປໃນເຮືອນຫລັງຫນຶ່ງຂອງພວກຫົວຫນ້າຟາຣີຊາຍ ເພື່ອຮັບປະທານອາຫານ,
ທີ່ນັ້ນເຂົາກໍເຝົ້າເບິ່ງພຣະອົງຢ່າງໃກ້ຊິດ.[2]ເບິ່ງແມ, ມີຊາຍຄົນຫນຶ່ງເປັນພະຍາດທ້ອງມານຢູ່ຕໍ່ຫນ້າພຣະອົງ.[3]ພຣະ-
ເຢຊູເຈົ້າຖາມພວກຊ່ຽວຊານບັນຍັດຂອງຢິວແລະພວກຟາຣີຊາຍວ່າ, “ຖ້າເຮັດໃຫ້ດີພະຍາດໃນວັນສະບາໂຕ
ຈະຖືກຕ້ອງຕາມພຣະບັນຍັດຫລືບໍ່?”

[4]ແຕ່ພວກເຂົາກໍມິດຢູ່. ດັ່ງນັ້ນພຣະເຢຊູເຈົ້າຈຶ່ງຈັບຕົວຊາຍທີ່ປ່ວຍເປັນພະຍາດນັ້ນ, ພຣະອົງຮັກສາເຂົາ ແລະປ່ອຍເຂົາກັບໄປ.[5]ພຣະ-
ອົງກ່າວກັບພວກເຂົາວ່າ, “ມີຄົນໃດໃນພວກທ່ານມີລູກຄົນຫນຶ່ງ ຫລືງົວໂຕຫນຶ່ງຕົກນ້ຳສ້າງໃນວັນສະບາໂຕ ແລ້ວຈະບໍ່ຮີບຊ່ວຍລູກ
ຫລືດຶງງົວນັ້ນອອກມາທັນທີບໍ່?”[6]ພວກເຂົາບໍ່ສາມາດຈະຕອບພຣະອົງໃນເລື່ອງນີ້ໄດ້.
[7]ເມື່ອພຣະເຢຊູເຈົ້າສັງເກດເຫັນພວກທີ່ຮັບເຊີນມານັ້ນເລືອກນັ່ງໃນບ່ອນທີ່ມີກຽດ ພຣະອົງຈຶ່ງກ່າວຄຳອຸປະມາແກ່ເຂົາວ່າ.
[8]“ເມື່ອຜູ້ໃດເຊີນທ່ານໄປໃນການກິນລ້ຽງສົມຣົດ ຈົ່ງຢ່າຊູ່ນັ່ງບ່ອນມີກຽດ ເພາະອາດຈະມີບາງຄົນທີ່ໄດ້ຮັບເຊີນຜູ້ມີກຽດຫລາຍກວ່າທ່ານອີກ.
[9]ເມື່ອເຈົ້າພາບທີ່ໄດ້ເຊີນທ່ານທັງສອງມາເຖິງ ເຂົາຈະເວົ້າກັບທ່ານວ່າ, ‘ຂໍທ່ານລຸກຂຶ້ນຈາກທີ່ນັ່ງນີ້ເພື່ອໃຫ້ອີກຄົນຫນຶ່ງ’
ແລ້ວທ່ານກໍຈະຕ້ອງອັບອາຍ ເພາະຕ້ອງຍ້າຍໄປນັ່ງບ່ອນຕ່ຳທີ່ສຸດ.
[10]ແຕ່ເມື່ອທ່ານໄດ້ຮັບເຊີນແລ້ວຈົ່ງໄປນັ່ງບ່ອນຕ່ຳທີ່ສຸດ ແລະເມື່ອເຈົ້າພາບມາເວົ້າກັບທ່ານວ່າ ‘ສະຫາຍເອີຍ, ຂໍເຊີນໄປນັ່ງບ່ອນສູງກວ່າເຖີດ’
ເມື່ອນັ້ນທ່ານກໍຈະໄດ້ຮັບກຽດຕໍ່ຫນ້າຄົນທັງຫລາຍທີ່ນັ່ງຮ່ວມໂຕະດຽວກັນກັບທ່ານ.[11]ເພາະທຸກຄົນທີ່ຍົກຕົວເອງຂຶ້ນຈະຕ້ອງຖືກເຮັດໃຫ້ຖ່ອຍລົງ
ແຕ່ຜູ້ທີ່ຖ່ອມຕົວລົງຈະໄດ້ຮັບການຍົກຍ້ອງ.”
[12]ພຣະເຢຊູເຈົ້າກ່າວກັບຊາຍຄົນນັ້ນຜູ້ທີ່ເຊີນພຣະອົງວ່າ, “ເມື່ອທ່ານຈັດການກິນລ້ຽງຂຶ້ນຕອນກາງເວັນ ຫລືກາງຄືນກໍຕາມ, ຢ່າເຊີນບັນ-
ດາມິດສະຫາຍ, ຫລືພວກອ້າຍນ້ອງ, ຫລືບັນດາວົງຕະກູນ, ຫລືເພື່ອນບ້ານຜູ້ຮັ່ງມີ ຢ້ານວ່າເຂົາຈະເຊີນທ່ານກັບເປັນການຕອບແທນທ່ານ.
[13]ແຕ່ເມື່ອທ່ານຈັດການກິນລ້ຽງ, ຈົ່ງເຊີນຄົນຍາກຈົນ, ຄົນພິການ, ຄົນຂາເສັ້ງ, ຄົນຕາບອດ.[14]ແລ້ວທ່ານໄດ້ຮັບພຣະພອນ ເພາະ-
ວ່າເຂົາບໍ່ມີອັນໃດຈະຕອບແທນທ່ານໄດ້ ແຕ່ທ່ານຈະໄດ້ຮັບການຕອບແທນໃນວັນທີ່ຄົນຊອບທັມເປັນຄືນມາຈາກຄວາມຕາຍ.”
[15]ເມື່ອຄົນຫນຶ່ງໃນທ່າມກາງພວກເຂົາທີ່ນັ່ງຮ່ວມໂຕະກັບພຣະເຢຊູເຈົ້າ ໄດ້ຍິນດັ່ງນັ້ນຈຶ່ງທູນພຣະອົງວ່າ, “ພຣະພອນເປັນຂອງຄົນທີ່ຈະໄດ້ຮັບປະ-
ທານອາຫານໃນອານາຈັກຂອງພຣະເຈົ້າ.”[16]ແຕ່ພຣະເຢຊູເຈົ້າຕອບຜູ້ນັ້ນວ່າ, “ຊາຍຄົນຫນຶ່ງຈັດຕຽມງານກິນລ້ຽງຂຶ້ນ
ແລະໄດ້ເຊີນຫລາຍຄົນມາ.[17]ເມື່ອອາຫານແລງໄດ້ຖືກຈັດຕຽມໄວ້ພ້ອມແລ້ວ
ເພິ່ນໄດ້ບອກຄົນຮັບໃຊ້ຂອງຕົນໄປບອກຄົນເຫລົ່ານັ້ນທີ່ໄດ້ຮັບເຊີນນັ້ນວ່າ ‘ເຊີນມາເຖີດ ເພາະທຸກສິ່ງຢ່າງຕຽມພ້ອມຮຽບຮ້ອຍແລ້ວ’.
[18]ບັນດາຄົນເຫລົ່ານັ້ນກໍຕັ້ງຕົ້ນຫາຂໍ້ແກ້ຕົວ ຜູ້ທຳອິດເວົ້າວ່າ ‘ເຮົາໄດ້ຊື້ນາໄວ້ຕອນຫນຶ່ງ ແລະເຮົາຈຳເປັນຕ້ອງໄປເບິ່ງນານັ້ນ
ຂໍອະພັຍທີ່ໄປຮ່ວມງານບໍ່ໄດ້’.[19]ແລະອີກຄົນຫນຶ່ງເວົ້າວ່າ, ‘ເຮົາໄດ້ຊື້ງົວໄວ້ຫ້າຄູ່ ແລະເຮົາຈະຕ້ອງໄປລ້ຽງງົວພວກນັ້ນ
ຂໍໂທດທີ່ໄປຮ່ວມງານບໍ່ໄດ້’.[20]ແລະອີກຄົນຫນຶ່ງເວົ້າວ່າ ‘ເຮົາໄດ້ແຕ່ງງານມີເມັຽແລ້ວ ເຮົາບໍ່ສາມາດໄປຮ່ວມງານໄດ້’.
[21]ຄົນຮັບໃຊ້ນັ້ນຈຶ່ງມາແລະເລົ່າເລື່ອງນີ້ໃຫ້ເຈົ້ານາຍຂອງຕົນ, ແລ້ວເຈົ້ານາຍຂອງເຮືອນນັ້ນກໍໃຈຮ້າຍຫລາຍ ແລະສັ່ງຄົນຮັບໃຊ້ນັ້ນວ່າ
‘ຈົ່ງຮີບອອກໄປຕາມຖະຫນົນໃຫຍ່ແລະຊ່ອມນ້ອຍໃນເມືອງ ແລະພາຄົນຍາກຈົນ, ຄົນພິການ, ຄົນຕາບອດ,
ແລະຄົນຂາເສັ້ງເຂົ້າມາທີ່ງານລ້ຽງ’.[22]ແລ້ວຄົນຮັບໃຊ້ຈຶ່ງມາບອກວ່າ ‘ນາຍເອີຍ, ສິ່ງທີ່ທ່ານສັ່ງຂ້ານ້ອຍກໍເຮັດແລ້ວ
ແຕ່ຍັງມີບ່ອນວ່າງເປົ່າເຫລືອຢູ່’.
[23]ເຈົ້ານາຍຄົນນັ້ນໄດ້ບອກຄົນຮັບໃຊ້ນັ້ນວ່າ ‘ຈົ່ງອອກໄປຕາມທາງຫລວງຕ່າງໆ ແລະຕາມເຂດນອກເມືອງ ແລະເກນຜູ້ຄົນໃຫ້ເຂົ້າມາ
ເພື່ອເຮືອນຂອງເຮົາຈະບໍ່ມີທີ່ວ່າງ’.[24]ເຮົາບອກເຈົ້າວ່າຈະບໍ່ມີຄົນໃດໃນພວກທີ່ໄດ້ຮັບເຊີນນັ້ນ ໄດ້ຊີມຣົດຊາດອາຫານຂອງເຮົາຈັກຄົນເລີຍ.”
[25]ຕອນນີ້ປະຊາຊົນຈຳນວນຫລວງຫລາຍກຳລັງຕິດຕາມພຣະເຢຊູເຈົ້າ, ພຣະອົງຈຶ່ງຫັນໄປກ່າວກັບພວກເຂົາວ່າ.
[26]“ຖ້າຜູ້ໃດມາຫາເຮົາແລະບໍ່ຊັງພໍ່ແມ່, ລູກເມັຽ, ອ້າຍນ້ອງຊາຍ-ຍິງ ກັບທັງຊີວິດຂອງຕົນເອງ, ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້.
[27]ຜູ້ໃດບໍ່ໄດ້ແບກໄມ້ກາງແຂນຂອງຕົນຕາມເຮົາມາ ຜູ້ນັ້ນຈະເປັນສາວົກຂອງເຮົາບໍ່ໄດ້.
[28]ເພາະວ່າມີຜູ້ໃດໃນພວກທ່ານ ທີ່ປາຖນາຈະສ້າງຫໍສູງ ແລ້ວຈະບໍ່ນັ່ງລົງຄິດໄລ່ງົບຕົ້ນທຶນທີ່ຈະໃຊ້ເພື່ອສ້າງຫໍສູງນັ້ນໃຫ້ສຳເລັດກ່ອນຫລືບໍ່?
[29]ບໍ່ດັ່ງນັ້ນເມື່ອໄດ້ວາງຮາກລົງແລະບໍ່ສາມາດເຮັດໃຫ້ສຳເລັດໄດ້ ທຸກຄົນທີ່ເຫັນກໍຈະກ່າວເຍາະເຍີ້ຍວ່າ,[30]‘ຊາຍຄົນນີ້ຕັ້ງຕົ້ນສ້າງແຕ່ເຮັດໃຫ້ສຳ-
ເລັດບໍ່ໄດ້’.
[31]ຫລືມີກະສັດອົງໃດ ເມື່ອຈະຍົກກອງທັບໄປຕໍ່ສູ້ກັບກະສັດອົງອື່ນໃນເສິກສົງຄາມ ແລ້ວຈະບໍ່ໄດ້ນັ່ງລົງ ແລະຄຶດຫາຄຳປຶກສາກ່ອນວ່າ
ດ້ວຍກຳລັງທະຫານຫນຶ່ງຫມື່ນຈະສາມາດສູ້ກັບກອງກຳລັງທະຫານສອງຫມື່ນຂອງກະສັດອີກອົງຫນຶ່ງໄດ້ຫລືບໍ່?
[32]ແລະຖ້າຫາກບໍ່ສາມາດສູ້ຊະນະໄດ້ ໃນຂະນະທີ່ກອງທັບອີກຝ່າຍຍັງຢູ່ຫ່າງໄກ ກະສັດອົງນີ້ຈະໃຊ້ທູດຄົນຫນຶ່ງໄປ
ເພື່ອຖາມເງື່ອນໄຂຂອງການສະຫງົບເສິກ.[33]ເພາະສະນັ້ນແຫລະ, ໃຜກໍຕາມໃນພວກທ່ານທີ່ບໍ່ໄດ້ສະຫລະສິ່ງສະຣະພັດທີ່ຕົນມີຢູ່
ຈະເປັນສາວົກຂອງເຮົາບໍ່ໄດ້.
[34]ເກືອເປັນສິ່ງດີ ແຕ່ຖ້າເກືອນັ້ນຫມົດຣົດເຄັມໄປແລ້ວ, ຈະເຮັດໃຫ້ກັບມາມີຣົດເຄັມອີກໄດ້ຢ່າງໃດ?[35]ມັນຈະບໍ່ສາມາດນຳມາໃຊ້ເປັນຝຸ່ນໃສ່ດິນ
ຫລືໃຊ້ຫມັກກັບຝຸ່ນທັມະຊາດໄດ້ອີກ, ມັນຈະຖືກເອົາໄປຖິ້ມເສັຽ. ຜູ້ໃດມີຫູເພື່ອຟັງ, ກໍຈົ່ງຟັງເອົາເທີ້ນ.”


generated on Tue Jun 17 19:01:42 2025

15 [1]ໃນເວລານັ້ນ ພວກຄົນເກັບພາສີແລະພວກຄົນບາບທັງຫລາຍເຂົ້າມາຫາພຣະເຢຊູເຈົ້າເພື່ອຈະຟັງພຣະອົງ.[2]ທັງພວກຟາຣີຊາຍແລະພວກ-
ທັມະຈານກໍຈົ່ມຕໍ່ກັນແລະກັນວ່າ, "ຊາຍຜູ້ນີ້ຕ້ອນຮັບຄົນບາບແລະເຖິງຂັ້ນກິນຮ່ວມກັນກັບພວກເຂົາ."

[3]ພຣະເຢຊູເຈົ້າຈຶ່ງກ່າວຄຳອຸປະມານີ້ແກ່ພວກເຂົາຟັງວ່າ.[4]ແລະມີໂຕຫນຶ່ງເສັ້ຽໄປ, ຈະບໍ່ປະເກົ້າສິບເກົ້າໂຕນັ້ນໄວ້ໃນກາງປ່າ
ແລະໄປຊອກຫາໂຕທີ່ຫລົງເສັ້ຽໄປນັ້ນຈົນກວ່າຈະໄດ້ພົບບໍ?[5]ແລະເມື່ອໄດ້ພົບແລ້ວເພິ່ນກໍຍົກແກະຂຶ້ນແບກເທິງບ່າດ້ວຍຄວາມຊົມຊື່ນຍິນດີ.
[6]ເມື່ອເພິ່ນມາເຖິງບ້ານແລ້ວ ເພິ່ນຈຶ່ງເຊີນບັນດາມິດສະຫາຍແລະເພື່ອນບ້ານຂອງຕົນມາ ແລ້ວບອກແກ່ພວກເຂົາວ່າ 'ມາຮ່ວມຊົມຊື່ນຍິນ-
ດີກັບເຮົາເຖີ້ນ ເພາະວ່າເຮົາໄດ້ພົບແກະຂອງເຮົາໂຕທີ່ເສັຍໄປແລ້ວນັ້ນ'.[7]ເຮົາບອກທ່ານທັງຫລາຍວ່າ ໃນທຳນອງດຽວກັນນີ້, ຈະມີຄວາມປິຕິຍິນ-
ດີໃນສະຫວັນ ເມື່ອຄົນບາບຄົນຫນຶ່ງກັບໃຈ ຫລາຍກວ່າຄົນສິລະທັມເກົ້າສິບເກົ້າຄົນທີ່ບໍ່ຕ້ອງການກັບໃຈ.
[8]ຫລືຍິງຄົນໃດທີ່ມີເງິນຢູ່ສິບຫລຽນ ຖ້ານາງເຮັດເສັ້ຽຫລຽນຫນຶ່ງຈະບໍ່ໄຕ້ໂຄມແລະກວາດເຮືອນຄົ້ນຫາຖ້ວນຖີ່ຈົນກວ່າຈະພົບບໍ.
[9]ແລະເມື່ອນາງພົບແລ້ວ ນາງກໍຈະເອີ້ນພວກສະຫາຍແລະບັນດາເພື່ອນບ້ານຂອງຕົນມາພ້ອມພຽງກັນ ແລະບອກວ່າ, 'ຈົ່ງມາຊົມຊື່ນຍິນ-
ດີກັບເຮົາເຖີ້ນ ເພາະເຮົາໄດ້ພົບເງິນຫລຽນຫນຶ່ງຂອງເຮົາໄດ້ເຮັດເສັ້ຽໄປແລ້ວນັ້ນ'.[10]ໃນທຳນອງດຽວກັນນີ້ ເຮົາບອກທ່ານທັງຫລາຍວ່າ
ຈະມີຄວາມປິຕິຍິນດີໃນທ່າມກາງພວກເທວະດາຂອງພຣະເຈົ້າ, ເມື່ອມີຄົນບາບຄົນຫນຶ່ງກັບໃຈ."
[11]ແລ້ວພຣະເຢຊູເຈົ້າກ່າວຕໍ່ໄປວ່າ, "ຊາຍຄົນຫນຶ່ງມີລູກຊາຍສອງຄົນ.[12]ຜູ້ນ້ອງເວົ້າກັບພໍ່ວ່າ 'ພໍ່ເອີຍ, ສ່ວນຊັບສົມບັດທີ່ຕົກເປັນຂອງຂ້ອຍນັ້ນ
ຂໍພໍ່ແບ່ງໃຫ້ຂ້ານ້ອຍສາ' ແລ້ວພໍ່ຈຶ່ງໄດ້ແບ່ງຊັບສົມບັດໃຫ້ລູກທັງສອງຄົນ.
[13-14]ຕໍ່ມາບໍ່ເທົ່າໃດວັນຜູ້ນ້ອງກໍໄດ້ຮວບຮວມເອົາຊັບສິນທີ່ເປັນຂອງຕົນ
ແລະເດີນທາງໄປຫວຽວເມືອງໄກແລະລາວໄດ້ຜານເງິນຂອງຕົນທີ່ນັ້ນດ້ວຍການຢູ່ກິນໃຊ້ຈ່າຍຢ່າງຟຸມເຟືອຍ ເມື່ອລາວໄດ້ໃຊ້ຈ່າຍຊັບເຫລົ່າ-
ນັ້ນຫມົດແລ້ວ ກໍເລີຍເກີດການອຶດຢາກອັນໃຫຍ່ທົ່ວເມືອງນັ້ນ, ລາວຈຶ່ງເລີ່ມຂັດສົນ.
[15]ລາວຈຶ່ງໄປຂໍອາໄສຢູ່ກັບຄົນຜູ້ຫນຶ່ງໃນເມືອງນັ້ນ ແລ້ວຜູ້ນັ້ນໄດ້ໃຊ້ລາວໄປລ້ຽງຫມູທີ່ທົ່ງນາ.[16]ລາວຄິດຢາກກິນຫມາກຖົ່ວທີ່ຫມູກິນໃຫ້ອີ່ມທ້ອງ
ແຕ່ບໍ່ມີໃຜເອົາໃຫ້ລາວກິນ.
[17]ແຕ່ເມື່ອລາວຮູ້ເມື່ອຄິງໄດ້ ລາວຈຶ່ງເວົ້າວ່າ 'ລູກຈ້າງຂອງພໍ່ເຮົາມີຫລາຍຄົນ ເຂົາຍັງມີອາຫານກິນອີ່ມຈົນເຫລືອ
ສ່ວນເຮົາຈະມາຕາຍອຶດຢາກຢູ່ທີ່ນີ້.
[18]ເຮົາຈະຕ້ອງອອກຈາກທີ່ນີ້ກັບຄືນໄປຫາພໍ່ຂອງເຮົາ ແລ້ວຈະເວົ້ານຳເພິ່ນວ່າ, "ພໍ່ເອີຍ, ລູກໄດ້ເຮັດຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ.
[19]ແລະບໍ່ສົມຄວນຈະໄດ້ເອີ້ນຊື່ວ່າເປັນລູກຂອງພໍ່ອີກຕໍ່ໄປ ແຕ່ຂໍໃຫ້ລູກເປັນເຫມືອນລູກຈ້າງຂອງພໍ່ຄົນຫນຶ່ງຖ້ອນ."'
[20]ດັ່ງນັ້ນ ລູກຊາຍຫລ້າກໍລຸກຂຶ້ນຄືນເມືອຫາພໍ່ຂອງຕົນ. ຂະນະທີ່ລາວຍັງຢູ່ໄກ, ພໍ່ໄດ້ແນມເຫັນລາວກໍມີຄວາມເມດຕາ ຈຶ່ງແລ່ນອອກໄປກອດ
ແລະຈູບລາວ.[21]ລູກຊາຍນັ້ນໄດ້ເອີຍຂຶ້ນຕໍ່ພໍ່ວ່າ 'ພໍ່ເອີຍ, ລູກໄດ້ເຮັດຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ. ບໍ່ສົມຄວນຈະໄດ້ເອີ້ນຊື່ວ່າເປັນລູກຂອງພໍ່ຕໍ່ໄປ'.
[22]ພໍ່ໄດ້ເອີ້ນບອກພວກຂ້ອຍໃຊ້ວ່າ 'ຈົ່ງຮີບເອົາເສື້ອຄຸມຢ່າງດີທີ່ສຸດມານຸ່ງໃຫ້ລູກຂອງເຮົາ ແລະເອົາແຫວນມາສວມໃສ່ມື
ແລະເອົາເກີບມາສຸບໃສ່ຕີນ.[23]ແລ້ວຈົ່ງເອົາງົວຫນຸ່ມໂຕອ້ວນພີມາຂ້າລ້ຽງສະຫລອງກັນ.
[24]ເພາະລູກຊາຍຂອງເຮົາຄົນນີ້ຕາຍແລ້ວແຕ່ຕອນນີ້ກັບເປັນຄືນມາອີກຄັ້ງ, ເຂົາໄດ້ເສຍໄປແລ້ວແຕ່ຕອນນີ້ກັບໄດ້ພົບກັນອີກຄັ້ງ'. ແລ້ວເຂົາທັງ-
ຫລາຍກໍຕັ້ງຕົ້ນສະຫລອງດ້ວຍຄວາມຍິນດີ.
[25]ຝ່າຍລູກຊາຍຜູ້ກົກນັ້ນອອກໄປທີ່ທົ່ງນາ ເມື່ອລາວກຳລັງກັບມາໃກ້ຈະເຖິງເຮືອນແລ້ວກໍໄດ້ຍິນສຽງເສບແລະການເຕັ້ນລຳ.
[26]ລາວຈຶ່ງເອີ້ນເອົາຄົນໃຊ້ຜູ້ຫນຶ່ງອອກມາຖາມວ່າ, 'ເກີດຫຍັງຂຶ້ນ?'.[27]ຄົນໃຊ້ຈຶ່ງບອກເພິ່ນວ່າ 'ນ້ອງຂອງທ່ານໄດ້ກັບມາເຮືອນແລ້ວ,
ພໍ່ຂອງທ່ານໄດ້ຈັດຂ້າງົວຫນຸ່ມມຕົວອ້ວນພີ ຕ້ອນຮັບລູກທີ່ກັບມາດ້ວຍຄວາມປອດພັຍ.
[28]ຜູ້ອ້າຍກໍຄຽດ ແລະບໍ່ຍອມເຂົ້າມາເຮືອນ, ພໍ່ກໍໄດ້ອອກໄປອອຍໃຈຊວນເຂົ້າມາ.[29]ແຕ່ລູກຊາຍກົກໄດ້ຕອບພໍ່ວ່າ 'ເບິ່ງແມ,
ຫລາຍປີມານີ້ລູກໄດ້ປະຕິບັດຮັບໃຊ້ພໍ່ ແລະລູກບໍ່ເຄີຍລະເມີດຕໍ່ຄຳສັ່ງສອນຂອງພໍ່ຈັກເທື່ອ ແຕ່ພໍ່ຍັງບໍ່ໃຫ້ລູກແກະແມ່ນແຕ່ໂຕດຽວ ເພື່ອຈະຈັດ-
ການລ້ຽງສະຫລອງຮ່ວມກັບມິດສະຫາຍ.[30]ແຕ່ເມື່ອລູກຊາຍຂອງພໍ່ຜູ້ນີ້, ທີ່ຜານສົມບັດຂອງພໍ່ດ້ວຍການຄົບຄ້າກັບພວກຍິງແມ່ຈ້າງກັບຄືນມາ
ພໍ່ກໍຂ້າງົວຫນຸ່ມໂຕອ້ວນພີຈັດການລ້ຽງໃຫ້ມັນ'.
[31]ພໍ່ຕອບວ່າ 'ລູກເອີຍເຈົ້າໄດ້ຢູ່ນຳພໍ່ມາຕະຫລອດ, ແລະທຸກສິ່ງທີ່ເປັນຂອງພໍ່ ກໍເປັນຂອງເຈົ້າຢູ່ນີ້ແລ້ວ.
[32]ແຕ່ເປັນເລື່ອງສົມຄວນທີ່ພໍ່ຕ້ອງມີຄວາມຊົມຊື່ນຍິນດີແລະສະຫລອງ, ເພາະນ້ອງຂອງເຈົ້າຄົນນີ້ຕາຍແລ້ວ ແຕ່ດຽວນີ້ກັບເປັນຄືນມາອີກ;
ລາວໄດ້ເສັຍແລ້ວ ແຕ່ດຽວນີ້ໄດ້ພົບອີກ'."

 generated on Tue Jun 17 19:01:42 2025

16 1ພຣະເຢຊູເຈົ້າກ່າວກັບພວກສາວົກດ້ວຍວ່າ, “ຍັງມີເສດຖີຄົນຫນຶ່ງທີ່ມີພະນັກງານເປັນຜູ້ຈັດການຊັບສິນຂອງເພິ່ນ
ມີຄົນມາລາຍງານຕໍ່ເສດຖີວ່າພະນັກງານຄົນ ນັ້ນໄດ້ຜານຊັບສົມບັດຂອງທ່ານ. 2ດັ່ງນັ້ນເສດຖີຈຶ່ງເອີ້ນຜູ້ຈັດການມາຖາມວ່າ
‘ເລື່ອງທີ່ເຮົາໄດ້ຍິນມາກ່ຽວກັບເຈົ້ານັ້ນເປັນຢ່າງໃດ? ຈົ່ງລາຍງານກ່ຽວກັບຫນ້າທີ່ຂອງເຈົ້າສາ ເພາະເຈົ້າຈະເປັນຜູ້ຈັດການຕໍ່ໄປອີກບໍ່ໄດ້.'

3ເຈົ້າພະນັກງານນັ້ນຈຶ່ງຄຶດໃນໃຈວ່າ ‘ເຮົາຄວນເຮັດແນວໃດຫນໍ ເພາະນາຍຈະຖອດເຮົາອອກເສັຽຈາກຫນ້າ-
ທີ່ຜູ້ຈັດການແລ້ວ ເຮົາຂຸດດິນກໍບໍ່ມີແຮງ, ແລະຈະຂໍທານກໍອາຍເຂົາ. 4ເຮົາຮູ້ແລ້ວວ່າຈະເຮັດແນວໃດດີ, ເພື່ອເວລາເຮົາຖືກຖອດຈາກຫນ້າ-
ທີ່ແລ້ວ, ຄວນມີ ຫມູ່ເພື່ອນທີ່ຈະຕ້ອນຮັບເຮົາໄວ້ໃນເຮືອນຂອງພວກເຂົາ’.
5ດັ່ງນັ້ນລາວຈຶ່ງເອີ້ນລູກຫນີ້ຂອງນາຍແຕ່ລະຄົນມາ ແລ້ວຖາມຜູ້ທຳອິດວ່າ, ‘ເຈົ້າເປັນຫນີ້ນາຍຂອງເຮົາເທົ່າໃດ?’. 6ຜູ້ນັ້ນກໍຕອບວ່າ ‘ເປັນຫນີ້ນ້ຳ-
ມັນຫມາກກອກຈຳນວນຮ້ອຍຖັງ’ ແລະລາວບອກກັບລູກຫນີ້ຄົນນັ້ນວ່າ ‘ເອົາບັນຊີຂອງເຈົ້າ ນັ່ງລົງໄວໆ ແລ້ວແກ້ເປັນຫ້າສິບຖັງ’.
7ຈາກນັ້ນລາວກໍຖາມອີກຄົນຫນຶ່ງວ່າ ‘ເຈົ້າເດ, ເຈົ້າເປັນຫນີ້ເທົ່າໃດ?’ ຜູ້ນີ້ຕອບວ່າ ‘ເປັນຫນີ້ເຂົ້າສາລີຈຳນວນຮ້ອຍເປົາ’
ເຂົາຈຶ່ງບອກກັບລູກຫນີ້ຄົນນັ້ນວ່າ ‘ຈົ່ງເອົາບັນຊີຂອງເຈົ້າມາ ແລ້ວແກ້ເປັນແປດສິບເປົາ’.
8ແລ້ວເສດຖີກໍຍ້ອງຍໍຜູ້ຈັດການບໍ່ສັດຊື່ນັ້ນວ່າ ເພິ່ນໄດ້ເຮັດດ້ວຍຄວາມສະຫລາດ
ເພາະວ່າຄົນຝ່າຍໂລກນີ້ກໍສະຫລາດໃນການຈັດການກັບພວກເຂົາເອງ ຫລາຍກວ່າຄົນຝ່າຍຄວາມສະຫວ່າງ’. 9ເຮົາບອກທ່ານທັງຫລາຍວ່າ
ຈົ່ງເຮັດໃຫ້ຕົນມີມິດສະຫາຍດ້ວຍຊັບສົມບັດອັນບໍ່ຍຸດຕິທັມ ເພື່ອເວລາຊັບນັ້ນເສັຽໄປແລ້ວ, ເຂົາຈະໄດ້ຕ້ອນ-
ຮັບພວກທ່ານໄວ້ໃນບ່ອນອາໄສອັນຖາວອນເປັນນິດ.
10ຄົນທີ່ສັດຊື່ໃນຂອງເລັກນ້ອຍທີ່ສຸດ ກໍສັດຊື່ໃນສິ່ງຂອງທີ່ໃຫຍ່ດ້ວຍ, ແລະຄົນທີ່ບໍ່ສັດຊື່ໃນຂອງເລັກນ້ອຍທີ່ສຸດ ກໍບໍ່ສັດ-
ຊື່ໃນສິ່ງຂອງທີ່ໃຫຍ່ເຫມືອນກັນ. 11ຖ້າຫາກພວກທ່ານບໍ່ສັດຊື່ໃນຊັບສົມບັດອັນບໍ່ທ່ຽງແທ້ ໃຜຈະໄວ້ວາງໃຈທ່ານສຳລັບຊັບສົມບັດອັນທ່ຽງແທ້?
12ແລະຖ້າຫາກພວກທ່ານບໍ່ສັດຊື່ໃນສິ່ງຂອງທີ່ເປັນຂອງຜູ້ອື່ນ ໃຜຈະມອບສິ່ງຂອງທີ່ເປັນຂອງທ່ານໃຫ້ແກ່ທ່ານ?.
13ບໍ່ມີຜູ້ໃດສາມາດເປັນຂ້າສອງເຈົ້າບ່າວສອງນາຍໄດ້ ເພາະຈະຊັງນາຍຄົນຫນຶ່ງແລະຮັກນາຍອີກຄົນຫນຶ່ງ, ຫລືຈະຫຸ້ມເຫຕໍ່ນາຍຜູ້ນີ້ແລະປະ-
ຫມາດນາຍຜູ້ນັ້ນ. ທ່ານບໍ່ສາມາດເປັນຂ້ອຍໃຊ້ຂອງພຣະເຈົ້າແລະຄວາມຮັ່ງມີໄປພ້ອມກັນໄດ້.”
14ຝ່າຍພວກຟາຣີຊາຍຊຶ່ງເປັນຄົນເຫັນແກ່ເງິນໄດ້ຍິນຄຳເຫລົ່ານີ້ທັງຫມົດ ພວກເຂົາກໍກ່າວເຍາະເຍີ້ຍພຣະອົງ. 15ພຣະອົງກ່າວຕໍ່ພວກເຂົາວ່າ,
“ທ່ານທັງຫລາຍອ້າງຕົວວ່າເປັນຄົນຊອບທັມຕໍ່ຫນ້າມະນຸດ ແຕ່ພຣະເຈົ້າຊົງຊາບຈິດໃຈຂອງພວກທ່ານ. ດ້ວຍວ່າຊຶ່ງເປັນທີ່ຍົກຍ້ອງທ່າມກາງມະ-
ນຸດກັບເປັນທີ່ຫນ້າລັງກຽດຕໍ່ພຣະພັກພຣະເຈົ້າ.
16ພຣະບັນຍັດແລະຜູ້ປະກາດພຣະທັມມີຜົນໃຊ້ຈົນເຖິງສະໄຫມໂຢຮັນໄດ້ມາ. ນັບຕັ້ງແຕ່ນັ້ນມາຂ່າວປະເສີດແຫ່ງຣາຊະອານາຈັກຂອງພຣະ-
ເຈົ້າກໍໄດ້ຖືກປະກາດອອກໄປ ແລະທຸກຄົນພະຍາຍາມບາກບັ່ນທີ່ຈະເຂົ້າໄປໃນຣາຊະອານາຈັກນັ້ນ.
17ການທີ່ຈະໃຫ້ຟ້າສະຫວັນແລະໂລກສະຫລາຍລ່ວງໄປ ກໍງ່າຍກວ່າທີ່ຈະໃຫ້ຈຸດດຽວຂອງພຣະບັນຍັດຖືກຍົກເລີກ.
18ຄົນໃດທີ່ຢ່າຮ້າງເມັຽຂອງຕົນ ແລ້ວໄປເອົາເມັຽໃຫມ່ກໍຜິດຖານຫລິ້ນຊູ້, ແລະຜູ້ຊາຍທີ່ແຕ່ງງານກັບຍິງທີ່-
ຮ້າງຈາກຜົວຂອງນາງກໍຜິດຖານຫລິ້ນຊູ້ເຫມືອນກັນ.
19ຍັງມີເສດຖີຄົນຫນຶ່ງນຸ່ງຫົ່ມເສື້ອສີມ່ວງອ່ອນເນື້ອລະອຽດ ລາວມີຄວາມປິຕິຍິນດີດ້ວຍຊັບອັນຮັ່ງມີຂອງຕົນທຸກວັນ. 20ແລະມີຂໍທານຜູ້ຫນຶ່ງຊື່ ລາ-
ຊະໂຣ ເປັນບາດເຕັມຕົວ ໄດ້ມານອນຢູ່ທີ່ປະຕູຮົ້ວບ້ານຂອງເສດຖີ. 21ແລະ ລາຊະໂຣ ຄຶດຢາກກິນຂອງທີ່ຕົກຈາກໂຕະຂອງເສດຖີນັ້ນ.
ແລະຫລາຍກວ່ານັ້ນຫມາກໍຍັງມາເລັຍບາດແຜຂອງລາວ.
22ຢູ່ມາເມື່ອຂໍທານຍາກຈົນຜູ້ນັ້ນຕາຍແລະຝູງເທວະດາໄດ້ຮັບເອົາໄປຢູ່ຂ້າງກາຍອັບຣາຮາມ. ຝ່າຍເສດຖີນັ້ນກໍຕາຍເຫມືອນກັນແລະຖືກຝັງໄວ້.
23ແລະຢູ່ໃນແດນມໍຣະນາ ຢູ່ໃນສະພາບທີ່ທຸກຂະເວທະນາຫລາຍ, ເສດຖີນັ້ນຈຶ່ງເງີຍຫນ້າຂຶ້ນເຫັນອັບຣາຮາມຢູ່ໄກໆ ແລະລາຊະ-
ໂຣຢູ່ແນບເອິກຂອງທ່ານ.
24ເສດຖີຈຶ່ງຮ້ອງວ່າ ‘ອັບຣາຮາມບິດາເອີຍ, ຂໍເອັນດູຂ້ານ້ອຍແດ່ທ້ອນ, ຂໍໃຊ້ ລາຊະໂຣມາ ເພື່ອຈະໄດ້ເອົາປາຍນີ້ວມືຈຸ່ມນ້ຳມາແປະໃສ່ລີ້ນຂ້າ-
ນ້ອຍໃຫ້ຊຸ່ມເຢັນ ເພາະຂ້ານ້ອຍກຳລັງທົນທຸກທໍຣະມານຢູ່ໃນແປວໄຟນີ້’.
25ແຕ່ອັບຣາຮາມຕອບວ່າ, ‘ລູກເອີຍ, ຈົ່ງຣະນຶກວ່າເມື່ອເຈົ້າຍັງມີຊີວິດຢູ່ ເຈົ້າໄດ້ຮັບຂອງດີສຳລັບຕົວທຸກຢ່າງ ແຕ່ ລາຊະ-
ໂຣຢູ່ໃນສະພາບທີ່ບໍ່ດີທຸກຢ່າງ, ມາບັດນີ້ ລາຊະໂຣ ໄດ້ຮັບຄວາມເລົ້າໂລມຢູ່ທີ່ນີ້ ແຕ່ເຈົ້າຢູ່ໃນຄວາມທຸກທໍຣະມານສາຫັດ. 26ນອກນັ້ນອີກ,
ຍັງມີເຫວອັນໃຫຍ່ຊຶ່ງຊົງຕັ້ງຂວາງຢູ່ ເພື່ອວ່າຖ້າຜູ້ໃດທີ່ຕ້ອງການຈະຂ້າມທີ່ນີ້ໄປເຖິງພວກເຈົ້າກໍບໍ່ໄດ້,
ແລະບໍ່ມີຜູ້ໃດທີ່ຈະຂ້ວາມຈາກທີ່ນັ້ນມາເຖິງພວກເຮົາໄດ້ເຊັ່ນກັນ.
27ເສດຖີນັ້ນເວົ້າວ່າ ‘ຂ້ານ້ອຍຂໍຮ້ອງທ່ານອັບຣາຮາມບິດາຂອງຂ້ານ້ອຍ ຂໍທ່ານຊ່ວຍສົ່ງລາວໄປຍັງເຮືອນພໍ່ຂອງຂ້ານ້ອຍ. 28ເພາະວ່າຂ້າ-
ນ້ອຍມີອ້າຍນ້ອງຫ້າຄົນ ເພື່ອໃຫ້ລາຊະໂຣໄປເຕືອນເຂົາ, ເພື່ອໃຫ້ພວກເຂົາຢ້ານທີ່ຈະມາໃນບ່ອນທໍຣະມານແຫ່ງນີ້’.
29ແຕ່ອັບຣາຮາມຕອບວ່າ ‘ພວກເຂົາມີໂມເຊແລະພວກຜູ້ປະກາດພຣະທັມແລ້ວ ໃຫ້ເຂົາຟັງຄົນເຫລົ່ານັ້ນສາ’. 30ເສດຖີນັ້ນຈຶ່ງວ່າ ‘ບໍ່ໄດ້, ອັບຣາ-
ຮາມບິດາເອີຍ, ເພາະຫາກມີໃຜບາງຄົນຈາກຫມູ່ຄົນຕາຍໄປຫາພວກເຂົາ ພວກເຂົາຈະຖິ້ມໃຈເກົ່າເອົາໃຈໃຫມ່’. 31ແຕ່ອັບຣາຮາມຕອບວ່າ
‘ຖ້າພວກເຂົາບໍ່ຟັງໂມເຊແລະພວກຜູ້ປະກາດພຣະທັມແລ້ວ, ເຖິງຈະມີໃຜບາງຄົນຄືນມາຈາກຕາຍ
ກໍບໍ່ສາມາດທີ່ຈະເຮັດໃຫ້ພວກເຂົາເຊື່ອໄດ້ເລີຍ’.”

17 [1]ພຣະເຢຊູເຈົ້າກ່າວກັບພວກສາວົກຂອງພຣະອົງວ່າ, “ຈຳເປັນທີ່ຈະມີເຫດໃຫ້ເກີດການຕ່າງໆເປັນສາເຫດຫລົງຜິດ ແຕ່ວິ-
ບັດແກ່ຜູ້ທີ່ເປັນຕົ້ນເຫດ.[2]ຖ້າຈະເອົາຫີນໂມ້ຜູກຄໍຄົນນັ້ນແລະຈົມນ້ຳທະ-
ເລເສັຽກໍດີກວ່າທີ່ຈະເຮັດໃຫ້ຄົນຫນຶ່ງໃນບັນດາຄົນເລັກນ້ອຍເຫລົ່ານີ້ເກີດການຫລົງຜິດ.

[3]ຈົ່ງຣະວັງໃຫ້ດີ, ຖ້າພີ່ນ້ອງຂອງພວກທ່ານເຮັດຜິດບາບ, ຈົ່ງຕິຕຽນເພິ່ນ ຖ້າເພິ່ນກັບໃຈ, ພວກທ່ານຈົ່ງຍົກໂທດໃຫ້ເພິ່ນ.
[4]ຖ້າຫາກເພິ່ນເຮັດຜິດຕໍ່ທ່ານເຈັດເທື່ອໃນມື້ຫນຶ່ງ ແລ້ວເພິ່ນມາຫາທ່ານທັງເຈັດເທື່ອນັ້ນ ແລ້ວເວົ້າວ່າ ‘ຂ້າພຣະເຈົ້າກັບໃຈ’ ທ່ານຕ້ອງຍົກ-
ໂທດໃຫ້ເພິ່ນ.”
[5]ພວກອັກຄະສາວົກໄດ້ທູນຕໍ່ອົງພຣະຜູ້ເປັນເຈົ້າວ່າ, “ຂໍໂຜດເພີ່ມຄວາມເຊື່ອ ໃຫ້ພວກຂ້ານ້ອຍແດ່ທ້ອນ.”[6]ອົງພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ,
“ຖ້າພວກທ່ານມີຄວາມເຊື່ອທໍ່ກັບແກ່ນຜັກກາດ ພວກທ່ານຈະບອກກົກມອນກົກນີ້ໄດ້ວ່າ ‘ຈົ່ງຖອນຮາກອອກແລະໄປປັກຢູ່ໃນທະເລ’
ມັນກໍຈະເຊື່ອຟັງຄວາມທ່ານ.
[7]ສົມມຸດວ່າພວກທ່ານມີຄົນຮັບໃຊ້ຄົນຫນຶ່ງ, ເປັນຄົນໄຖນາຫລືຄົນລ້ຽງແກະ, ທ່ານຈະເວົ້າກັບເຂົາເມື່ອເຂົາກັບມາແຕ່ທົ່ງນາ ຫລືວ່າ ‘ມາໄວ
ມານັ່ງລົງແລະກິນອາຫານແລງນຳກັນ'?[8]ແຕ່ຜູ້ເປັນນາຍຈະບໍ່ເວົ້າດັ່ງນີ້ຫລືວ່າ ‘ຈົ່ງຈັດແຈງອາຫານໃຫ້ເຮົາກິນແລະຈົ່ງຄາດແອວຂອງເຈົ້າ
ແລະຮັບໃຊ້ເຮົາ ຈົນກວ່າເຮົາຈະກິນແລະດື່ມອີ່ມແລ້ວ, ຈາກນັ້ນເຈົ້າຈຶ່ງຄ່ອຍກິນແລະດື່ມ’?
[9]ນາຍບໍ່ຕ້ອງຂອບໃຈຄົນຮັບໃຊ້ເພາະຄົນຮັບໃຊ້ເຮັດສິ່ງຕ່າງໆ ຕາມຄຳສັ່ງຂອງນາຍບໍ່ແມ່ນບໍ?[10]ພວກທ່ານກໍເຫມືອນກັນນັ້ນ
ເມື່ອພວກທ່ານໄດ້ເຮັດຕາມຄຳສັ່ງທີ່ໄດ້ຮັບແລ້ວ ກໍສົມຄວນເວົ້າວ່າ ‘ພວກຂ້ານ້ອຍເປັນຄົນຮັບໃຊ້ທີ່ບໍ່ມີປະໂຫຍດ
ເພາະພວກຂ້ານ້ອຍພຽງແຕ່ໄດ້ເຮັດຕາມສິ່ງທີ່ພວກຂ້ານ້ອຍສົມຄວນເຮັດຢູ່ແລ້ວ’.”
[11]ເຫດການນີ້ເກີດຂຶ້ນໃນຂະນະທີ່ພຣະອົງສະເດັດໄປນະຄອນເຢຣູຊາເລັມ, ພຣະອົງໄດ້ສະເດັດຜ່ານເຂດຊາຍແດນແຂວງຊາມາ-
ເຣຍແລະແຂວງຄາລີເລ.[12]ເມື່ອພຣະອົງສະເດັດເຂົ້າໄປໃນບ້ານແຫ່ງຫນຶ່ງ ພຣະອົງພົບຊາຍສິບຄົນທີ່ເປັນພະຍາດຂີ້ທູດ
ພວກເຂົາຢືນຢູ່ແຕ່ໄກຈາກພຣະອົງ.[13]ແລະພວກເຂົາໄດ້ເປັ່ງສຽງຮ້ອງວ່າ, “ພຣະເຢຊູຜູ້ເປັນອາຈານເຈົ້າເອີຍ, ຂໍໂຜດເມດຕາພວກຂ້ານ້ອຍແດ່-
ຖ້ອນ”.
[14]ເມື່ອພຣະເຢຊູເຈົ້າເຫັນພວກເຂົາ ພຣະອົງຈຶ່ງກ່າວແກ່ພວກເຂົາວ່າ, “ຈົ່ງໄປແລະສະແດງຕົວຂອງພວກທ່ານຕໍ່ພວກປະໂລຫິດ”
ແລະສິ່ງທີ່ເກີດຂຶ້ນຄືໃນຂະນະທີ່ພວກເຂົາກຳລັງອອກຈາກບ່ອນນັ້ນໄປ ພວກເຂົາກໍດີຈາກພະຍາດຂີ້ທູດ.
[15]ເມື່ອຄົນຫນຶ່ງໃນພວກເຂົາເຫັນວ່າຕົນໄດ້ຮັບການຮັກສາໃຫ້ດີພະຍາດແລ້ວ, ລາວກໍຕ່າວຄືນມາແລະກ່າວດ້ວຍສຽງອັນດັງສັນຣະເສີນພຣະ-
ເຈົ້າ.[16]ລາວຂາບລົງທີ່ພຣະບາດຂອງພຣະເຢຊູເຈົ້າ ແລະໂມທະນາຂອບພຣະຄຸນຂອງພຣະອົງ. ຄົນນັ້ນເປັນໄທຊາມາເຣັຍ.
[17]ພຣະເຢຊູເຈົ້າຖາມຜູ້ນັ້ນວ່າ, “ທັງສິບຄົນທີ່ໄດ້ຮັບການສາຮັກໃຫ້ດີສະອາດບໍ່ແມ່ນບໍ? ແລ້ວອີກເກົ້າຄົນນັ້ນຢູ່ໃສ?
[18]ບໍ່ເຫັນຜູ້ໃດກັບມາຖວາຍພຣະກຽດແດ່ພຣະເຈົ້າ, ເວັ້ນໄວ້ແຕ່ຄົນຕ່າງຊາດຜູ້ນີ້?”[19]ພຣະເຢຊູເຈົ້າບອກລາວວ່າ, “ຈົ່ງລຸກຂຶ້ນແລະໄປເຖີ້ນ.
ຄວາມເຊື່ອຂອງເຈົ້າໄດ້ຮັກສາໃຫ້ເຈົ້າດີແລ້ວ."
[20]ພວກຟາຣີຊາຍໄດ້ທູນຖາມພຣະເຢຊູເຈົ້າວ່າ ເມື່ອໃດຣາຊະອານາຈັກຂອງພຣະເຈົ້າຈະມາເຖິງ, ພຣະເຢຊູເຈົ້າຕອບພວກເຂົາວ່າ, “ຣາຊະອາ-
ນາຈັກຂອງພຣະເຈົ້າບໍ່ມາປະກົດຢ່າງໃດຢ່າງຫນຶ່ງທີ່ສັງເກດເຫັນໄດ້.[21]ຫລືສິ່ງທີ່ໃຜຈະເວົ້າວ່າ ‘ຢູ່ທີ່ນີ້' ຫລື 'ຢູ່ທີ່ນັ້ນ’ ເພາະຣາຊະອານາ-
ຈັກຂອງພຣະເຈົ້າຢູ່ທ່າມກາງພວກທ່ານ.”
[22]ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ, “ວັນເຫລົ່ານັ້ນຈະມາເຖິງເມື່ອພວກທ່ານປາຖນາທີ່ຈະເຫັນຫນຶ່ງໃນບັນດາວັນຂອງບຸດມະນຸດ
ແຕ່ພວກທ່ານຈະບໍ່ໄດ້ເຫັນ.[23]ພວກເຂົາຈະເວົ້າກັບພວກທ່ານວ່າ ‘ມາເບິ່ງນີ້ແມຫລື ມາເບິ່ງພຸ້ນແມ’ ແຕ່ຢ່າອອກໄປ ຫລືຢ່າຕິດຕາມເຂົາໄປ.
[24]ເຫມືອນກັບຟ້າແມບ ທີ່ເຮັດໃຫ້ທ້ອງຟ້າສະຫວ່າງຈາກເບື້ອງຫນຶ່ງໄປເຖິງອີກເບື້ອງຫນຶ່ງ ບຸດມະນຸດກໍຈະເປັນຢ່າງນັ້ນແຫລະ
ໃນວັນຂອງພຣະອົງ.
[25]ແຕ່ພຣະອົງຈະຕ້ອງທົນທຸກຫລາຍປະການ ແລະຖືກປະຕິເສດໂດຍຄົນໃນຍຸກນີ້.[26]ແລະສິ່ງທີ່ຈະເກີດຂຶ້ນໃນບັນດາວັນຂອງບຸດມະນຸດນັ້ນ
ກໍຈະເຫມືອນກັນກັບເຫດການທີ່ເກີດຂຶ້ນໃນສະໄຫມຂອງໂນອາ.[27]ພວກເຂົາກິນ, ດື່ມ, ແຕ່ງງານ ແລະຍົກໃຫ້ເປັນຜົວເມັຍກັນ, ຈົນເຖິງວັນທີ່ໂນ-
ອາໄດ້ເຂົ້າໄປໃນເຮືອ ແລະນ້ຳກໍໄດ້ຖ້ວມລ້າງຜານພວກເຂົາທຸກຄົນ.
[28]ຢ່າງດຽວກັນກັບສະໄຫມຂອງ ໂລດ ທີ່ພວກເຂົາກິນ, ດື່ມ, ຊື້ຂາຍ, ປູກຝັງ ແລະກໍ່ສ້າງ.[29]ຈົນເຖິງວັນທີ່ ໂລດ ໄດ້ອອກຈາກເມືອງໂຊໂດມ,
ມີໄຟແລະມາດໄດ້ຕົກລົງຈາກຟ້າສະຫວັນ ເຫມືອນຮ່າຝົນ ແລະພວກເຂົາກໍຖືກເຜົາຜານຈົນຫມົດ.
[30]ຫລັງຈາກທີ່ສິ່ງດຽວກັນນີ້ເກີດຂຶ້ນແລ້ວ ກໍຈະເຖິງວັນທີ່ບຸດມະນຸດປາກົດໃຫ້ເຫັນ.[31]ໃນວັນນັ້ນຢ່າໃຫ້ຄົນທີ່-
ຢູ່ເທິງຫລັງຄາເຮືອນລົງມາເພື່ອເກັບເອົາສິ່ງຕ່າງໆຂອງຕົນ ແລະຢ່າໃຫ້ຄົນທີ່ຢູ່ທົ່ງນາຕ່າວຄືນມາເຮືອນ.
[32]ຈົ່ງລະນຶກເຖິງສິ່ງທີ່ເກີດຂຶ້ນກັບພັນຣະຍາຂອງໂລດໃຫ້ດີ.[33]ຜູ້ໃດກໍຕາມພະຍາຍາມຮັກສາຊີວິດຂອງຕົນ ຜູ້ນັ້ນຈະເສຍຊີວິດ,
ແຕ່ຜູ້ໃດກໍຕາມຍອມເສັຍຊີວິດ ຜູ້ນັ້ນຮັກສາຊີວິດໃຫ້ລອດໄດ້.
[34]ເຮົາບອກທ່ານວ່າ ໃນຄືນວັນນັ້ນຈະມີຊາຍສອງຄົນນອນຢູ່ຕຽງດຽວ. ຄົນຫນຶ່ງຈະຖືກຮັບໄປແລະຈະປະອີກຄົນຫນຶ່ງໄວ້.[35]ຈະມີຍິງສອງຄົນກຳ-
ລັງໂມ້ແປ້ງຢູ່ນຳກັນ ຄົນຫນຶ່ງຈະຖືກຮັບໄປແລະຈະປະຄົນຫນຶ່ງໄວ້.[36]ຈະມີຊາຍສອງຄົນຢູ່ທົ່ງນາ
ຄົນຫນຶ່ງຈະຖືກຮັບໄປແລະຈະຊົງປະຄົນຫນຶ່ງງໄວ້.[37]ພວກເຂົາຈຶ່ງທູນຖາມພຣະອົງວ່າ, “ຈະເກີດຂຶ້ນຢູ່ບ່ອນໃດ, ອົງພຣະຜູ້ເປັນເຈົ້າ?” ພຣະ-
ເຢຊູເຈົ້າຕອບວ່າ, “ຊາກສົບຢູ່ບ່ອນໃດ ຝູງແຮ້ງກໍຈະຕອມຢູ່ບ່ອນນັ້ນ.”


generated on Tue Jun 17 19:01:42 2025

18 1ແລ້ວພຣະເຢຊູເຈົ້າກ່າວຄຳອຸປະມາເລື່ອງຫນຶ່ງແກ່ພວກເຂົາກ່ຽວກັບການທີ່ພວກເຂົາຄວນອະທິຖານຢູ່ສະເຫມີແລະບໍ່ໃຫ້ອ່ອນກຳລັງໃຈ.
2ພຣະອົງຊົງກ່າວວ່າ, “ໃນເມືອງຫນຶ່ງມີຕຸລາການຜູ້ຫນຶ່ງທີ່ບໍ່ຢຳເກງພຣະເຈົ້າແລະບໍ່ເຫັນແກ່ຫນ້າຜູ້ໃດ.

3ໃນເມືອງນັ້ນມີແມ່ຫມ້າຍຜູ້ຫນຶ່ງແລະນາງຫມັ່ນມາຫາຕຸລາການຜູ້ນັ້ນ, ໂດຍເລົ່າວ່າ ‘ຂໍຊ່ວຍຕັດສິນໃຫ້ຂ້ານ້ອຍໄດ້ຮັບຄວາມຍຸດຕິທັມ
ຕໍ່ຝ່າຍຄູ່ກໍລະນີຂອງຂ້ານ້ອຍແດ່ທ້ອນ.’4ຈົນເວລາຜ່ານໄປດົນນານ ຝ່າຍຕຸລາການຜູ້ນີ້ບໍ່ເຕັມໃຈຈະຊ່ວຍນາງ,
ແຕ່ພາຍລຸນມາທ່ານກໍນຶກໃນໃຈວ່າ ‘ແມ່ນວ່າເຮົາບໍ່ຢຳເກງພຣະເຈົ້າແລະບໍ່ເຫັນແກ່ຫນ້າມະນຸດກໍດີ.5ແຕ່ເພາະແມ່ຫມ້າຍຄົນນີ້ມາກວນໃຈເຮົາ,
ເຮົາຈະຊ່ວຍໃຫ້ນາງໄດ້ຮັບຄວາມຍຸດຕິທັມ ເພື່ອນາງຈະບໍ່ຕ້ອງມາລົບກວນເຮົາຢູ່ເລື້ອຍໆ’.”
6ແລ້ວອົງພຣະຜູ້ເປັນເຈົ້າກ່າວວ່າ, “ຈົ່ງຟັງສິ່ງທີ່ຕຸລາການຜູ້ບໍ່ຍຸດຕິທັມຄົນນີ້ໄດ້ເວົ້າ.7ແລ້ວພຣະເຈົ້າຈະບໍ່ຊົງນຳຄວາມຍຸດ-
ຕິທັມມາຍັງຄົນທີ່ພຣະອົງເລືອກເຂົາໄວ້ຄືຜູ້ທີ່ຮ້ອງຫາພຣະອົງທັງກາງເວັນແລະກາງຄືນ. ພຣະອົງຈະຊ້ານານໃນເລື່ອງຂອງພວກເຂົາບໍ່?
8ເຮົາບອກທ່ານທັງຫລາຍວ່າ ພຣະອົງຈະຊົງໂຜດຄວາມຍຸດຕິທັມໃຫ້ແກ່ເຂົາໂດຍໄວ ແຕ່ເຖິງປານນັ້ນ, ເມື່ອບຸດມະນຸດສະເດັດມາ ພຣະ-
ອົງຈະພົບຄວາມເຊື່ອຢູ່ໃນໂລກບໍ່?”
9ແລ້ວພຣະອົງໄດ້ກ່າວຄຳອຸປະມານີ້ແກ່ບາງຄົນທີ່ຫລົງຄິດວ່າຕົວເອງວ່າເປັນຄົນຊອບທັມແລະຫມິ່ນປະຫມາດຄົນອື່ນວ່າ.
10“ມີຊາຍສອງຄົນຂຶ້ນໄປອະທິຖານໃນບໍຣິເວນພຣະວິຫານ, ຜູ້ຫນຶ່ງເປັນຟາຣີຊາຍ ອີກຄົນເປັນຄົນເກັບພາສີ.
11ຟາຣີຊາຍໄດ້ຢືນຂຶ້ນອະທິຖານກ່ຽວກັບຕົນເອງວ່າ ‘ຂ້າແດ່ພຣະເຈົ້າ, ຂ້ານ້ອຍຂໍໂມທະນາຂອບພຣະຄຸນພຣະອົງ ທີ່ຂ້າ-
ນ້ອຍບໍ່ເຫມືອນຄົນອື່ນທີ່ເປັນໂຈນ, ເປັນຄົນອະທັມ, ເປັນຄົນຫລິ້ນຊູ້ສູ່ຜົວເມຍ, ຫລືເປັນເຫມືອນຄົນເກັບພາສີຄົນນີ້.12ຂ້ານ້ອຍຖືສິນອົດອາ-
ຫານສອງເທື່ອໃນທຸກອາທິດ ຂ້ານ້ອຍຖະຫວາຍຫນຶ່ງສ່ວນສິບຈາກທັງຫມົດທີ່ຂ້ານ້ອຍໄດ້ຮັບ’.
13ແຕ່ຄົນເກັບພາສີຜູ້ນັ້ນຢືນຢູ່ແຕ່ໄກອອກໄປ ບໍ່ກ້າແມ່ນແຕ່ຈະເງີຍຫນ້າເບິ່ງຟ້າ, ໄດ້ແຕ່ຕີເອິກຂອງຕົນກ່າວວ່າ, ‘ຂ້າແດ່ພຣະ-
ເຈົ້າ ຂໍຊົງໂຜດພຣະເມດຕາແກ່ຂ້ານ້ອຍຜູ້ເປັນຄົນບາບແດ່ທ້ອນ!’.14ເຮົາບອກທ່ານທັງຫລາຍວ່າ ເມື່ອຊາຍຄົນນີ້ກັບໄປຍັງເຮືອນຂອງຕົນ
ກໍຊົງນັບວ່າເຂົາເປັນຄົນຊອບທັມຫລາຍກວ່າຄົນອື່ນ, ເພາະວ່າທຸກຄົນທີ່ຍົກຕົວຂຶ້ນຈະຖືກຖອຍລົງ ແຕ່ທຸກຄົນທີ່ຖ່ອມຕົວລົງຈະຖືກຍົກຂຶ້ນ.”
15ແລ້ວບັນດາປະຊາຊົນກໍພາເດັກນ້ອຍທັງຫລາຍມາຫາພຣະເຢຊູເຈົ້າຢຽດພຣະຫັດໃສ່ເຂົາ, ເມື່ອພວກສາວົກເຫັນກໍຫ້າມຄົນເຫລົ່ານັ້ນໄວ້.
16ແຕ່ພຣະເຢຊູເຈົ້າຊົງເອີ້ນພວກເຂົາມາຫາພຣະອົງແລະຊົງກ່າວວ່າ, “ຈົ່ງປ່ອຍໃຫ້ເດັກນ້ອຍມາຫາເຮົາເຖີດ ຢ່າຂູ່ຫ້າມເຂົາ, ເພາະວ່າຣາ-
ຊະອານາຈັກຂອງພຣະເຈົ້າເປັນຂອງເດັກນ້ອຍເຫລົ່ານີ້ແຫລະ.17ເຮົາບອກຄວາມຈິງແກ່ພວກທ່ານວ່າ, ຜູ້ໃດບໍ່ຮັບເອົາຣາຊະອານາຈັກຂອງພຣະ-
ເຈົ້າເຫມືອນດັ່ງເດັກນ້ອຍໆ ຜູ້ນັ້ນຈະເຂົ້າໃນຣາຊະອານາຈັກຂອງພຣະເຈົ້ານັ້ນບໍ່ໄດ້ຢ່າງແນ່ນອນ.”
18ມີເຈົ້ານາຍຜູ້ຫນຶ່ງທູນຖາມພຣະອົງວ່າ, “ທ່ານອາຈານຜູ້ປະເສີດເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດ ຈຶ່ງຈະໄດ້ຊີວິດອັນຕະຫລອດໄປເປັນ-
ນິດ?”19ພຣະເຢຊູເຈົ້າຕອບລາວວ່າ, “ເປັນຫຍັງທ່ານຈຶ່ງເອີ້ນເຮົາວ່າຜູ້ປະເສີດ? ບໍ່ມີໃຜປະເສີດເວັ້ນແຕ່ພຣະເຈົ້າອົງດຽວເທົ່ານັ້ນ.20ທ່ານຮູ້-
ຈັກພຣະບັນຍັດແລ້ວຊຶ່ງວ່າ ‘ຢ່າຫລິ້ນຊູ້ຊູ່ຜົວເມັຽເພິ່ນ, ຢ່າຂ້າຄົນ, ຢ່າລັກຊັບ, ຢ່າເປັນພະຍານບໍ່ຈິງ, ຈົ່ງນັບຖືບິ-
ດາມານດາຂອງທ່ານ’.”21ເຈົ້ານາຍຄົນນັ້ນທູນຕອບວ່າ, “ພຣະບັນຍັດເຫລົ່ານີ້ຂ້ານ້ອຍໄດ້ຖືຮັກສາໄວ້ຕັ້ງແຕ່ເປັນເດັກນ້ອຍມາ.”
22ເມື່ອພຣະເຢຊູເຈົ້າໄດ້ຍິນດັ່ງນັ້ນ ພຣະອົງກ່າວແກ່ຄົນນັ້ນວ່າ, “ທ່ານຍັງຂາດຢູ່ສິ່ງຫນຶ່ງ ທ່ານຕ້ອງໄປຂາຍສິ່ງຂອງທັງຫມົດຊຶ່ງທ່ານມີຢູ່
ແລະແຈກຢາຍໃຫ້ແກ່ຄົນຍາກຈົນ ແລ້ວທ່ານຈະມີຊັບສົມບັດໃນສະຫວັນ ແລະຈົ່ງຕາມເຮົາມາ.”23ແຕ່ເມື່ອຊາຍຮັ່ງມີໄດ້ຍິນດັ່ງນີ້,
ເຂົາກໍເປັນທຸກໃຈຫລາຍ ເພາະວ່າລາວຮັ່ງມີຫລາຍ.
24ແລ້ວພຣະເຢຊູເຈົ້າເຫັນເຂົາເສົ້າໂສກຈຶ່ງກ່າວວ່າ, “ເປັນການຍາກແທ້ຫນໍທີ່ບັນດາຄົນຮັ່ງມີຈະເຂົ້າໃນຣາຊະອານາຈັກຂອງພຣະເຈົ້າ!25ເພາະ-
ໂຕອູດຈະລອດຮູເຂັມ ກໍງ່າຍກວ່າຄົນຮັ່ງມີຈະເຂົ້າໃນຣາຊະອານາຈັກຂອງພຣະເຈົ້າ.”
26ຝ່າຍຄົນທັງຫລາຍທີ່ໄດ້ຍິນຈຶ່ງເວົ້າວ່າ, “ແລ້ວໃຜຈະລອດພົ້ນໄດ້?”27ພຣະເຢຊູເຈົ້າຕອບວ່າ, “ສິ່ງທີ່ເປັນໄປບໍ່ໄດ້ສຳລັບມະນຸດນັ້ນ
ແຕ່ເປັນໄປໄດ້ສຳລັບພຣະເຈົ້າ.”
28ເປໂຕທູນວ່າ, “ພວກຂ້ານ້ອຍໄດ້ສະຫລະທຸກສິ່ງທີ່ເປັນຂອງພວກຂ້ານ້ອຍແລະໄດ້ຕິດຕາມພຣະອົງ.”29ແລ້ວພຣະເຢຊູຊົງກ່າວກັບພວກເຂົາວ່າ,
“ເຮົາບອກຄວາມຈິງແກ່ທ່ານທັງຫລາຍວ່າ ຜູ້ໃດທີ່ໄດ້ສະຫລະຢ້າວເຮືອນ, ຫລືເມັຽ, ຫລືອ້າຍນ້ອງ, ຫລືພໍ່ແມ່, ຫລືລູກເຕົ້າ ເພື່ອເຫັນແກ່ຣາ-
ຊະອານາຈັກຂອງພຣະເຈົ້າ.30ກໍຈະເປັນຜູ້ໄດ້ຮັບຜົນຫລາຍໃນໂລກນີ້ ແລະຈະໄດ້ຊີວິດອັນຕະຫລອດໄປເປັນນິດໃນໂລກຫນ້າ.”
31ຫລັງຈາກທີ່ພຣະອົງຊົງເອີ້ນພວກສາວົກສິບສອງຄົນເຂົ້າມາ, ພຣະອົງຊົງກ່າວແກ່ພວກເຂົາວ່າ, “ເບິ່ງແມ, ເຮົາກຳລັງຈະຂຶ້ນໄປນະຄອນເຢຣູ-
ຊາເລັມ ແລະສິ່ງສາຣະພັດຊຶ່ງພວກຜູ້ປະກາດພຣະທັມໄດ້ຂຽນໄວ້ເຖິງບຸດມະນຸດຈະສຳເລັດ.
32ເພາະວ່າພຣະອົງຈະຖືກມອບໃຫ້ແກ່ຄົນຕ່າງຊາດ, ແລ້ວເຂົາຈະເຍາະເຍີ້ຍ ແລະຈະຖືກເຮັດໃຫ້ອັບອາຍ ແລະຈະຖືກຖົ່ມນ້ຳລາຍໃສ່ເພິ່ນ.
33ຫລັງຂ້ຽນຕີພຣະອົງແລ້ວ ພວກເຂົາກໍຈະປຣະຫານພຣະອົງແລະໃນວັນທີສາມ ພຣະອົງຈະເປັນຄືນມາອີກຄັ້ງຫນຶ່ງ.”
34ພວກສາວົກບໍ່ໄດ້ເຂົ້າໃຈສິ່ງເຫລົ່ານີ້ເລີຍ ແລະຄຳນັ້ນກໍຖືກອັດບັງໄວ້ຈາກພວກເຂົາ ແລະພວກເຂົາຈຶ່ງບໍ່ເຂົ້າໃຈສິ່ງທີ່ພຣະອົງຊົງກ່າວນັ້ນ.
35ຕໍ່ມາ ເມື່ອພຣະເຢຊູເຈົ້າສະເດັດມາໃກ້ເມືອງເຢຣີໂກ, ມີຊາຍຕາບອດຜູ້ຫນຶ່ງກຳລັງນັ່ງຂໍທານຢູ່ແຄມທາງ.36ເມື່ອໄດ້ຍິນສຽງປະຊາ-
ຊົນກຳລັງຍ່າງກາຍໄປ, ລາວກໍຖາມວ່າແມ່ນເກີດເລື່ອງອັນໃດ?37ພວກເຂົາຈຶ່ງຕອບຊາຍຕາບອດວ່າ ພຣະເຢຊູໄທນາຊາ-
ເຣັດກຳລັງສະເດັດຜ່ານມາ.
38ຊາຍຕາບອດນັ້ນໄດ້ຮ້ອງຂຶ້ນວ່າ, “ພຣະເຢຊູບຸດດາວິດເຈົ້າເອີຍ, ຂໍໂຜດເມດຕາຂ້ານ້ອຍແດ່-
ຖ້ອນ!”39ຄົນທີ່ຍ່າງໄປກ່ອນຈຶ່ງຫ້າມໃຫ້ຊາຍຕາບອດມິດງຽບລົງ, ແຕ່ຜູ້ນັ້ນຊ້ຳຮ້ອງແຮງຂຶ້ນກວ່າເກົ່າ, “ບຸດດາວິດເຈົ້າເອີຍ, ໂຜດເມດຕາຂ້າ-
ນ້ອຍແດ່ຖ້ອນ!”
40ພຣະເຢຊູເຈົ້າຊົງຢຸດຢູ່ແລະສັ່ງເຂົາໃຫ້ພາຊາຍຕາບອດມາຫາພຣະອົງ. ເມື່ອຊາຍຕາບອດເຂົ້າມາໃກ້ແລ້ວ, ພຣະອົງຊົງຖາມລາວວ່າ.
41“ເຈົ້າຢາກໃຫ້ເຮົາເຮັດຫຍັງໃຫ້ເຈົ້າ?” ຊາຍນັ້ນທູນຕອບວ່າ, “ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍຢາກເຫັນຮຸ່ງ.”
42ພຣະເຢຊູເຈົ້າກ່າວແກ່ຊາຍຕາບອດວ່າ, “ຈົ່ງເຫັນຮຸ່ງສາ ຄວາມເຊື່ອຂອງເຈົ້າໄດ້ຊ່ອຍໃຫ້ເຈົ້າດີປົກກະຕິແລ້ວ.”43ແລ້ວລາວກໍເຫັນຮຸ່ງໃນທັນ-
ໃດນັ້ນ ແລະໄດ້ຕິດຕາມພຣະອົງໄປແລະຖວາຍກຽດແດ່ພຣະເຈົ້າ, ເມື່ອຄົນທັງປວງໄດ້ເຫັນຢ່າງນັ້ນກໍພາກັນສັນຣະເສີນພຣະເຈົ້າ.


generated on Tue Jun 17 19:01:42 2025

19 [1]ພຣະເຢຊູເຈົ້າສະເດັດເຂົ້າໄປແລະກຳລັງຊົງຜ່ານເມືອງເຢຣິໂກ.[2]ເບິ່ງແມ! ມີຊາຍຄົນຫນຶ່ງທີ່ຢູ່ທີ່ນັ້ນຊື່ວ່າ ຊັກຂາຍ ເພິ່ນເປັນນາຍດ່ານພາ-
ສີແລະເປັນຄົນຮັ່ງມີ.

[3]ເພິ່ນກຳລັງພະຍາຍາມຈະໄດ້ເຫັນພຣະເຢຊູເຈົ້າວ່າເປັນຄົນແນວໃດ,
ແຕ່ເພາະຕົນເປັນຄົນເຕ້ຍເຂົາຈຶ່ງບໍ່ສາມາດເບິ່ງເຫັນໄດ້ເພາະຄົນຫນ້າແຫນ້ນ.[4]ດັ່ງນັ້ນ ຊັກ-
ຂາຍຈຶ່ງແລ່ນລັດຫນ້າໄປຂຶ້ນຕົ້ນຫມາກເດື່ອເພື່ອຈະໄດ້ເຫັນພຣະອົງ, ເພາະພຣະອົງກຳລັງສະເດັດໄປທາງນັ້ນ.
[5]ເມື່ອພຣະເຢຊູເຈົ້າສະເດັດມາເຖິງບ່ອນນັ້ນ, ພຣະອົງຊົງແຫງນຫນ້າຂຶ້ນແລະເວົ້າກັບເພິ່ນວ່າ, “ຊັກຂາຍເອີຍ, ຈົ່ງຮີບລົງມາເຖີດ, ເພາະ-
ວ່າວັນນີ້ເຮົາຈະຕ້ອງພັກຢູ່ໃນເຮືອນຂອງເຈົ້າ.”[6]ດັ່ງນັ້ນ ເຂົາຈຶ່ງຮີບລົງມາແລະຕ້ອນຮັບພຣະອົງດ້ວຍຄວາມຍິນດີເບີກບານໃຈ.
[7]ເມື່ອຄົນທັງຫລາຍໄດ້ເຫັນດັ່ງນີ້ ພວກເຂົາທັງຫມົດພາກັນຈົ່ມວ່າ, “ເປັນຫຍັງ ພຣະອົງຈຶ່ງເຂົ້າໄປພັກຢູ່ກັບຊາຍທີ່ເປັນບາບ.”
[8]ຊັກຂາຍກໍຢືນຂຶ້ນແລະທູນກັບອົງພຣະຜູ້ເປັນເຈົ້າວ່າ, “ພຣະອົງເຈົ້າ, ຂ້ານ້ອຍຈະຍອມມອບຊັບສິນເຄິ່ງຫນຶ່ງຂອງຂ້າຂ້ອຍໃຫ້ແກ່ຄົນຍາກຈົນ
ແລະຖ້າຂ້ານ້ອຍໄດ້ສໍ້ໂກງເອົາຂອງຜູ້ໃດ ຂ້ານ້ອຍກໍຍອມສົ່ງຄືນແກ່ເຂົາສີ່ເທົ່າ.”[9]ພຣະເຢຊູເຈົ້າກ່າວກັບເພິ່ນວ່າ,
“ວັນນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ ເພາະຄົນນີ້ເປັນລູກຫລານຂອງອັບຣາຮາມເຫມືອນກັນ.[10]ເພາະວ່າບຸດມະນຸດໄດ້ມາ
ເພື່ອຊອກຫາແລະໂຜດຊ່ວຍຄົນທີ່ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ.”
[11]ຂະນະທີ່ພວກເຂົາໄດ້ຍິນເລື່ອງເຫລົ່ານີ້, ພຣະອົງກຳລັງກ່າວຕໍ່ໄປອີກເປັນຄຳອຸປະມາ, ເພາະພຣະອົງສະເດັດມາໃກ້ນະຄອນເຢຣູຊາເລັມແລ້ວ
ແລະເພາະຄົນທັງຫລາຍຄິດເອົາເອງວ່າຣາຊະອານາຈັກຂອງພຣະເຈົ້າກຳລັງຈະມາປາກົດໂດຍທັນທີ.[12]ພຣະອົງກ່າວວ່າ,
“ມີເຈົ້ານາຍຜູ້ຫນຶ່ງຈະເດີນທາງອອກໄປປະເທດທີ່ໄກ ເພື່ອໄປຮັບເອົາຣາຊະອານາຈັກນີ້ເປັນຂອງຕົນແລ້ວຈຶ່ງກັບຄືນມາ.
[13]ທ່ານໄດ້ເອີ້ນຄົນຮັບໃຊ້ຂອງຕົນສິບຄົນມາຫາແລະມອບເງິນສິບມະນາໃຫ້ແກ່ພວກເຂົາ ແລ້ວສັ່ງວ່າ ‘ຈົ່ງເອົາເງິນນີ້ໄປເປັນທຶນຄ້າ-
ຂາຍຈົນກວ່າເຮົາຈະກັບມາ’.[14]ແຕ່ປະຊາຊົນໃນເມືອງນັ້ນກຽດຊັງເຈົ້ານາຍຄົນນີ້ ແລະສົ່ງຄະນະທູດຜູ້ແທນຕາມຫລັງທ່ານໄປ ໂດຍບອກວ່າ
‘ເຮົາຈະບໍ່ໃຫ້ຊາຍທ່ານນີ້ປົກຄອງພວກເຮົາ’.[15]ເມື່ອເຖິງເວລາ ນາຍຄົນນັ້ນກໍກັບມາອີກຄັ້ງ ແລະໄດ້ຮັບອຳນາດປົກຄອງອານາຈັກແລ້ວ.
ທ່ານຈຶ່ງເອີ້ນພວກຄົນຮັບໃຊ້ທີ່ທ່ານໄດ້ໃຫ້ເງິນໄວ້ນັ້ນມາຫາ ເພື່ອທີ່ທ່ານຈະຮູ້ວ່າເຂົາທຸກຄົນຄ້າໄດ້ກຳໄຣເທົ່າໃດ?
[16]ຄົນຮັບໃຊ້ຜູ້ທຳອິດເຂົ້າມາຕໍ່ຫນ້າທ່ານແລ້ວທູນວ່າ ‘ນາຍເຈົ້າເອີຍ, ເງິນມະນາຫນຶ່ງຂອງທ່ານໄດ້ກຳໄຣເພີ່ມອີກສິບມະນາ’.
[17]ທ່ານເຈົ້ານາຍຈຶ່ງກ່າວກັບຄົນນັ້ນວ່າ ‘ດີຫລາຍ, ເຈົ້າເປັນຜູ້ຮັບໃຊ້ທີ່ດີ, ເພາະເຈົ້າຊື່ສັດໃນຂອງເລັກນ້ອຍ, ເຈົ້າຈົ່ງມີອຳນາດປົກ-
ຄອງໄດ້ສິບຫົວເມືອງ’.
[18]ຄົນທີສອງເຂົ້າມາແລ້ວທູນວ່າ, ‘ນາຍເອີຍ, ເງິນມະນາຫນຶ່ງຂອງທ່ານໄດ້ກຳໄຣເພີ່ມຂຶ້ນອີກຫ້າມະນາ’.
[19]ທ່ານເຈົ້ານາຍຈຶ່ງກ່າວກັບຄົນນັ້ນເຫມືອນກັນວ່າ, ‘ເຈົ້າຈະໄດ້ປົກຄອງຫ້າຫົວເມືອງ’.
[20]ອີກຄົນຫນຶ່ງເຂົ້າມາແລ້ວທູນວ່າ ‘ນາຍເຈົ້າເອີຍ, ນີ້ຄືເງິນມະນາຫນຶ່ງຂອງທ່ານ, ຂ້ານ້ອຍໄດ້ຫໍ່ມ້ຽນໄວ້ໃນຜ້າຢ່າງປອດພັຍ.[21]ເພາະຂ້າ-
ນ້ອຍຢ້ານທ່ານ, ດ້ວຍວ່າທ່ານເປັນຄົນເຄັ່ງຄັດ ທ່ານເຄີຍເກັບເອົາສິ່ງທີ່ທ່ານບໍ່ໄດ້ລົງແຮງ ແລະເກັບກ່ຽວອັນທີ່ທ່ານບໍ່ໄດ້ຫວ່ານໄວ້’.
[22]ເຈົ້ານາຍທ່ານນັ້ນຈຶ່ງຕອບກັບຄົນຮັບໃຊ້ນັ້ນວ່າ ‘ເຮົາຈະລົງໂທດດ້ວຍຄຳປາກຂອງເຈົ້າເອງ, ອ້າຍຂ້ອຍໃຊ້ຜູ້ຊົ່ວເອີຍ, ເຈົ້າຮູ້ວ່າ
ເຮົາເປັນຜູ້ເຄັ່ງຄັດ, ເຄີຍເກັບເອົາອັນທີ່ເຮົາບໍ່ໄດ້ລົງແຮງ, ແລະເກັບກ່ຽວອັນທີ່ເຮົາບໍ່ໄດ້ຫວ່ານ.
[23]ແລ້ວຍ້ອນຫຍັງເຈົ້າຈຶ່ງບໍ່ຝາກເງິນຂອງເຮົາໄວ້ທີ່ທະນາຄານ, ເມື່ອເຮົາກັບມາກໍຈະໄດ້ເງິນຂອງເຮົາຄືນພ້ອມກັບດອກເບ້ຍດ້ວຍ’.
[24]ທ່ານເຈົ້ານາຍຈຶ່ງສັ່ງຄົນທີ່ຢືນຢູ່ໃກ້ຫັ້ນວ່າ ‘ຈົ່ງຍຶກເງິນມະນາຫນຶ່ງນັ້ນໄປຈາກມັນເສັຽ ເອົາໃຫ້ແກ່ຜູ້ທີ່ມີສິບມະນາ’.[25]ຄົນເຫລົ່ານັ້ນຕອບວ່າ
‘ນາຍເຈົ້າເອີຍ, ແຕ່ຊາຍຜູ້ນັ້ນມີສິບມະນາແລ້ວ.’
[26]ເຮົາບອກເຈົ້າທັງຫລາຍວ່າ ຄົນທີ່ມີຫລາຍຢູ່ແລ້ວຈະຊົງເພີ່ມເຕີມໃຫ້ຜູ້ນັ້ນອີກ, ແຕ່ສຳລັບຜູ້ທີ່ບໍ່ມີ
ແມ່ນວ່າສິ່ງທີ່ເຂົາມີຢູ່ນັ້ນກໍຈະຖືກຍຶກເອົາໄປເສັຽ.[27]ແຕ່ບັນດາສັດຕຣູຂອງເຮົາ ຜູ້ທີ່ບໍ່ຍອມໃຫ້ເຮົາປົກຄອງເຂົານັ້ນ
ຈົ່ງພາເຂົາມາທີ່ນີ້ແລ້ວຂ້າມັນເສັຽຕໍ່ຫນ້າເຮົາ.”
[28]ເມື່ອພຣະເຢຊູເຈົ້າກ່າວຄຳເຫລົ່ານີ້ແລ້ວ ກໍສະເດັດນຳຫນ້າ ຂຶ້ນໄປເມືອງເຢຣູຊາເລັມ.
[29]ຈົນເມື່ອພຣະອົງສະເດັດມາໃກ້ບ້ານເບັດຟາເຄແລະບ້ານເບັດທານີ, ມາພູເຂົາທີ່ເອີ້ນວ່າພູຫມາກກອກເທດ, ແລ້ວພຣະອົງໄດ້ຊົງໃຊ້ສາ-
ວົກສອງຄົນໄປ.[30]ໂດຍສັ່ງວ່າ, “ຈົ່ງເຂົ້າໄປໃນບ້ານທີ່ຢູ່ຕໍ່ຫນ້າ, ເມື່ອພວກທ່ານເຂົ້າໄປຈະພົບລູກລໍນ້ອຍ ທີ່ຍັງບໍ່ມີໃຜຂຶ້ນຂີ່ຈັກເທື່ອ,
ຈົ່ງແກ້ມັດແລ້ວຈູງມາທີ່ນີ້.[31]ຫາກມີໃຜຖາມທ່ານວ່າ ‘ແກ້ມັນໄປເຮັດຫຍັງ?’ ຈົ່ງຕອບຢ່າງນີ້ວ່າ ‘ອົງພຣະຜູ້ເປັນເຈົ້າຕ້ອງການໃຊ້ມັນ.’”
[32]ພວກສາວົກທີ່ຖືກໃຊ້ໄປນັ້ນ ໄດ້ພົບລູກລໍຕາມທີ່ພຣະເຢຊູເຈົ້າໄດ້ບອກແກ່ພວກເພິ່ນ.[33]ຂະນະທີ່ພວກເພິ່ນກຳລັງແກ້ມັດລໍນ້ອຍຢູ່ນັ້ນ,
ພວກເຈົ້າຂອງໄດ້ຖາມວ່າ, “ທ່ານແກ້ມັດລູກລໍເຮັດຫຍັງ?”.[34]ເຂົາຕອບວ່າ,
“ອົງພຣະຜູ້ເປັນເຈົ້າຕ້ອງການໃຊ້ມັນ.”[35]ພວກເຂົາໄດ້ຈູງລູກລໍນັ້ນມາໃຫ້ພຣະເຢຊູເຈົ້າແລ້ວເອົາເສື້ອຜ້າຂອງເຂົາປູຫລັງມັນ,
ແລ້ວໃຫ້ພຣະເຢຊູເຈົ້າຂຶ້ນຂີ່ລໍ.[36]ຂະນະທີ່ພຣະອົງກຳລັງສະເດັດໄປນັ້ນ, ພວກເຂົາໄດ້ເອົາເສື້ອຜ້າຂອງຕົນປູລົງຕາມທາງ.
[37]ເມື່ອພຣະອົງກຳລັງສະເດັດມາໃກ້ບ່ອນຈະລົງຈາກພູເຂົາຫມາກກອກເທດ, ພວກລູກສິດທັງຫມົດກໍຕັ້ງຕົ້ນຊົມຊື່ນຍິນດີສັນຣະເສີນພຣະ-
ເຈົ້າດ້ວຍສຽງດັງ, ເຖິງການອັດສະຈັນທີ່ພວກເຂົາໄດ້ເຫັນ.[38]ແລະເວົ້າວ່າ, “ສາທຸການແດ່ກະສັດຜູ້ທີ່ສະເດັດມາໃນພຣະນາມຂອງອົງພຣະຜູ້-
ເປັນເຈົ້າ, ສັນຕິສຸກຈົ່ງມີໃນສະຫວັນແລະພຣະຣັດສະຫມີໃນທີ່ສູງສຸດ.”
[39]ຝ່າຍຟາຣີຊາຍໃນຫມູ່ປະຊາຊົນນັ້ນໄດ້ທູນພຣະອົງວ່າ, “ອາຈານເອີຍ, ຈົ່ງຫ້າມພວກສາວົກຂອງທ່ານແດ່!”[40]ພຣະອົງຊົງຕອບເຂົາວ່າ,
“ເຮົາບອກທ່ານທັງຫລາຍວ່າ ຖ້າຄົນເຫລົ່ານີ້ມິດງຽບສຽງໄປ ກ້ອນຫີນທັງຫລາຍກໍຈະເປັ່ງສຽງແທນ.”
[41]ເມື່ອພຣະເຢຊູເຈົ້າສະເດັດມາໃກ້ເມືອງ, ພຣະອົງກໍຊົງຮ້ອງໄຫ້ເສັຽໃຈໃຫ້ກັບເມືອງນີ້.[42]ໂດຍຊົງກ່າວວ່າ,
“ຖ້າຫາກໃນວັນນີ້ແມ່ນເຈົ້າເອງຄວນຮູ້ວ່າສິ່ງໃດຈະນຳສັນຕິສຸກມາໃຫ້ເຈົ້າ, ແຕ່ບັດນີ້ສິ່ງເຫລົ່ານັ້ນໄດ້ບັງລັບໄວ້ຈາກຕາເຈົ້າແລ້ວ.
[43]ເພາະວັນນັ້ນຈະມາເຖິງທ່ານ, ວັນທີ່ສັດຕຣູຂອງເຈົ້າຈະຂຸດຄູອ້ອມຮອບເຈົ້າ ແລະຈະໂຈມຕີເຈົ້າທຸກໆ ດ້ານ.
[44]ພວກເຂົາຈະທຸບຕີທ່ານແລະລູກທັງຫລາຍທີ່ຢູ່ນຳທ່ານໃຫ້ລົງພຽງດິນ. ພວກເຂົາຈະບໍ່ປະໃຫ້ກ້ອນຫີນຊ້ອນທັບກັນໄວ້ພາຍໃນເຈົ້າ,
ເພາະທ່ານບໍ່ຍອມຮັບຕອນທີ່ພຣະເຈົ້າກຳລັງພະຍາຍາມຊ່ວຍໃຫ້ທ່ານລອດ.”


generated on Tue Jun 17 19:01:42 2025

[45]ພຣະເຢຊູເຈົ້າໄດ້ສະເດັດເຂົ້າໄປໃນພຣະວິຫານ ແລະຂັບໄລ່ບັນດາພວກທີ່ກຳລັງຊື້ຂາຍຢູ່ອອກໄປ.[46]ພຣະອົງບອກພວກເຂົາວ່າ,
“ມີຄຳຂຽນໄວ້ໃນພຣະຄັມພີວ່າ ‘ພຣະວິຫານຂອງເຮົາເປັນສະຖານທີ່ໄຫວ້ວອນ’ ແຕ່ພວກເຈົ້າມາເຮັດໃຫ້ເປັນຖ້ຳຂອງໂຈນ’'
[47]ພຣະເຢຊູເຈົ້າສັ່ງສອນຢູ່ໃນບໍຣິເວນພຣະວິຫານທຸກວັນ, ພວກປະໂລຫິດ. ພວກທັມະຈານ
ແລະພວກຜູ້ນຳຂອງຄົນຢິວຕ້ອງການຈະຂ້າພຣະອົງເສັຽ.[48]ແຕ່ເຂົາຍັງບໍ່ໄດ້ພົບຊ່ອງທາງທີ່ຈະເຮັດໄດ້, ເພາະຄົນທັງຫລາຍກຳລັງເອົາໃຈ-
ໃສ່ຟັງຄຳສອນຂອງພຣະອົງ.


generated on Tue Jun 17 19:01:42 2025

20 1ຢູ່ມາມື້ຫນຶ່ງ, ຂະນະທີ່ພຣະເຢຊູເຈົ້າກຳລັງສັ່ງສອນປະຊາຊົນ ແລະປະກາດຂ່າວປະເສີດໃນບໍຣິເວນພຣະວິຫານນັ້ນ
ມີພວກຫົວຫນ້າປະໂລຫິດ, ກັບພວກທັມະຈານ ພ້ອມດ້ວຍພວກເຖົ້າແກ່ໄດ້ມາຫາພຣະອົງ.2ພວກເຂົາທູນພຣະອົງວ່າ, “ບອກພວກເຮົາແດ່
ວ່າທ່ານໄດ້ກະທຳການເຫລົ່ານີ້ດ້ວຍສິດອຳນາດອັນໃດ ຫລືແມ່ນໃຜໃຫ້ສິດອຳນາດແກ່ທ່ານ?”

3ພຣະອົງໄດ້ຕອບພວກເຂົາວ່າ, “ເຮົາຈະຖາມທ່ານທັງຫລາຍຂໍ້ຫນຶ່ງດ້ວຍເຫມືອນກັນ, ບອກເຮົາມາເບິ່ງດູວ່າ.4ບັບ-
ຕິສະມາຂອງໂຢຮັນນັ້ນມາຈາກສະຫວັນຫລືມາຈາກມະນຸດ?”
5ພວກເຂົາຈຶ່ງປຶກສາກັນວ່າ, “ຖ້າພວກເຮົາຈະຕອບວ່າ ‘ມາຈາກສະຫວັນ’ ເພິ່ນຄົງຈະຖາມເຮົາວ່າ ‘ແລ້ວເຫດໃດພວກທ່ານບໍ່ເຊື່ອໂຢຮັນ?’.
6ແຕ່ຖ້າພວກເຮົາຈະວ່າ ‘ມາຈາກມະນຸດ’ ຄົນທັງປວງກໍຈະຄວ່າງກ້ອນຫີນໃສ່ພວກເຮົາ ເພາະເຂົາເຊື່ອຫມັ້ນວ່າ ໂຢຮັນເປັນຜູ້ປະກາດພຣະ-
ທັມ.”
7ດັ່ງນັ້ນ ພວກເຂົາຈຶ່ງທູນຕອບວ່າ ບໍ່ຮູ້ຈັກວ່າມາຈາກໃສ.8ພຣະເຢຊູເຈົ້າກ່າວຕອບເຂົາວ່າ “ເຮົາຈະບໍ່ບອກພວກທ່ານເຫມືອນກັນວ່າ
ເຮົາກະທຳການນີ້ດ້ວຍສິດອຳນາດອັນໃດ.”
9ພຣະອົງໄດ້ເລົ່າຄຳອຸປະມາເລື່ອງນີ້ໃຫ້ປະຊາຊົນຟັງວ່າ, “ຊາຍຄົນຫນຶ່ງໄດ້ປູກສວນອະງຸ່ນໄວ້ ແລ້ວໃຫ້ຊາວສວນເຊົ່າ ແລ້ວອອກໄປຕ່າງປະ-
ເທດເປັນເວລາດົນນານ.10ເມື່ອເຖິງເວລາກຳນົດ ທ່ານຈຶ່ງສົ່ງຄົນຮັບໃຊ້ຜູ້ຫນຶ່ງມາຫາພວກເຊົ່າສວນນັ້ນ ເພື່ອເກັບສ່ວນແບ່ງຈາກສວນອະງຸ່ນນັ້ນ
ແຕ່ຝ່າຍພວກເຊົ່າສວນນັ້ນ ໄດ້ຂ້ຽນຕີຄົນຮັບໃຊ້ຄົນນັ້ນ ແລະໄລ່ໃຫ້ກັບໄປມືເປົ່າ.
11ເພິ່ນຈຶ່ງສົ່ງຄົນຮັບໃຊ້ອີກຜູ້ຫນຶ່ງໄປ ພວກເຊົ່າສວນໄດ້ຂ້ຽນຕີຄົນໃຊ້ຜູ້ນັ້ນ, ເຮັດຕໍ່ລາວຢ່າງຫນ້າອັບອາຍ ແລ້ວໄລ່ເຂົາໃຫ້ໄປມືເປົ່າ.
12ເຈົ້າຂອງສວນໄດ້ໃຊ້ຄົນທີສາມໄປ ແລະພວກເຊົ່າສວນກໍໄດ້ທຳຮ້າຍ ແລ້ວໂຍນລາວອອກນອກສວນໄປ.
13ຝ່າຍເຈົ້າຂອງສວນອະງຸ່ນຈຶ່ງເວົ້າວ່າ ‘ເຮົາຈະເຮັດແນວໃດ? ເຮົາຈະໃຊ້ລູກທີ່ຮັກຂອງເຮົາໄປ ເມື່ອພວກເຊົ່າສວນເຫັນ ບາງທີເຂົາຈະນັບ-
ຖືແລະໃຫ້ກຽດເຮົາ ’.14ແຕ່ເມື່ອພວກເຊົ່າສວນເຫັນລູກນັ້ນເຂົາກໍປຶກສາກັນວ່າ ‘ຜູ້ນີ້ແຫລະ ເປັນເຈົ້າຂອງມໍຣະດົກ ຈົ່ງຂ້າມັນເສັຍ ເພື່ອມໍຣະ-
ດົກຈະຕົກມາເປັນຂອງເຮົາ’.
15ດັ່ງນັ້ນ ພວກເຂົາຈຶ່ງໂຍນລູກຊາຍລາວຖິ້ມອອກນອກສວນ ແລ້ວຂ້າລາວເສັຍ, ເຫດສັນນັ້ນ ຜູ້ເປັນເຈົ້າຂອງສວນຈະເຮັດຢ່າງ-
ໃດກັບຄົນເຫລົ່ານັ້ນ?16ທ່ານຈະມາຂ້າຄົນເຊົ່າສວນເຫລົ່ານັ້ນ ແລ້ວຍົກສວນໃຫ້ຜູ້ອື່ນເຊົ່າ” ເມື່ອເຂົາທັງຫລາຍໄດ້ຍິນດັ່ງ-
ນັ້ນຈຶ່ງພາກັນຮ້ອງຂຶ້ນວ່າ, “ພຣະເຈົ້າຂໍຢ່າໃຫ້ເກີດເປັນຢ່າງນັ້ນ!”.
17ແຕ່ພຣະເຢຊູເຈົ້າເພັ່ງເບິ່ງເຂົາແລ້ວກ່າວວ່າ, “ຂໍ້ພຣະຄັມພີຕອນນີ້ມີຄວາມຫມາຍວ່າຢ່າງໃດ?, ຫີນທີ່ນາຍຊ່າງກໍ່ສ້າງບໍ່ຍອມຮັບ
ໄດ້ກາຍເປັນຫີນເສົາເອກແລ້ວ?’18ທຸກຄົນທີ່ລົ້ມທັບຫີນນີ້, ຜູ້ນັ້ນຈະຕ້ອງແຕກຫັກເປັນປ່ຽງໆ ແຕ່ຖ້າຫີນນັ້ນຈະຕົກທັບຜູ້ໃດ
ຜູ້ນັ້ນຈະແຫລກມຸ່ນລະອຽດ.
19ເພາະສະນັ້ນ ພວກທັມະຈານແລະຫົວຫນ້າປະໂລຫິດຈຶ່ງພະຍາຍາມຈະຈັບພຣະອົງໃນເວລານັ້ນ ເພາະພວກເຂົາຮູ້ວ່າ ພຣະອົງຊົງກ່າວຄຳອຸ-
ປະມານັ້ນຕໍ່ສູ້ພວກເຂົາ ແຕ່ເຂົາກໍຢ້ານປະຊາຊົນ.20ຈຶ່ງສົ່ງຄົນປອມຕົວເປັນພວກເຄັ່ງສາສນາ ເຝົ້າສອດແນມພຣະອົງຢ່າງໃກ້ຊິດ
ເພື່ອຈັບຜິດໃນຖ້ອຍຄຳຂອງພຣະອົງ ເພື່ອຫາທາງຈັບກຸມພຣະອົງສົ່ງໃຫ້ຜູ້ມີອຳນາດ ແລະເຈົ້າຫນ້າທີ່ຂອງຜູ້ປົກຄອງ.
21ພວກເຂົາຖາມພຣະອົງວ່າ, “ອາຈານເອີຍ ພວກຂ້ານ້ອຍຮູ້ຢູ່ວ່າທ່ານກ່າວແລະສັ່ງສອນຢ່າງຖືກຕ້ອງ, ແລະທ່ານບໍ່ເຫັນແກ່ຫນ້າຜູ້ໃດ,
ແຕ່ໄດ້ສັ່ງສອນຄວາມຈິງໃນທາງຂອງພຣະເຈົ້າຢ່າງສັດຊື່.22ເປັນເລື່ອງສົມຄວນຫລືບໍ່ທີ່ເຮົາຈະເສັຽພາສີໃຫ້ແກ່ກາຍຊາ?”
23ແຕ່ພຣະເຢຊູເຈົ້າຊົງຮູ້ກົນອຸບາຍຂອງພວກເຂົາ ຈຶ່ງກ່າວກັບພວກເຂົາວ່າ.24“ຈົ່ງເອົາເງິນຫລຽນຫນຶ່ງມາໃຫ້ເຮົາເບິ່ງ ຮູບແລະຄຳຈາ-
ຣຶກນີ້ເປັນຂອງໃຜ?” ພວກເຂົາຕອບວ່າ, “ເປັນຂອງກາຍຊາ.”
25ພຣະອົງຊົງກ່າວກັບພວກເຂົາວ່າ, “ຖ້າຢ່າງນັ້ນ ສິ່ງທີ່ເປັນຂອງກາຍຊາ ຈົ່ງຄືນໃຫ້ແກ່ກາຍຊາ, ແລະສິ່ງທີ່ເປັນຂອງພຣະເຈົ້າ
ຈົ່ງຄືນໃຫ້ແດ່ພຣະເຈົ້າ.”26ພວກເຂົາຈຶ່ງບໍ່ອາດໂຕ້ແຍ້ງເລື່ອງທີ່ພຣະອົງສອນ. ຕໍ່ຫນ້າປະຊາຊົນ ຕ່າງກໍປະຫລາດໃຈໃນຄຳຕອບຂອງພຣະອົງ
ແລະບໍ່ເວົ້າຫຍັງອີກ.
27ພວກຊາດູກາຍບາງຄົນມາຫາພຣະອົງ ພວກນີ້ທີ່ບໍ່ເຊື່ອໃນການເປັນຄືນມາຈາກຕາຍ.28ພວກເຂົາຖາມພຣະອົງວ່າ, “ອາຈານເອີຍ, ໂມ-
ເຊໄດ້ຂຽນສັ່ງພວກເຮົາໄວ້ວ່າ, ຖ້າຊາຍຄົນໃດມີເມັຽແລະເຂົາຕາຍໄປໂດຍບໍ່ມີລູກ, ກໍໃຫ້ອ້າຍ
ຫລືນ້ອງຊາຍຜູ້ນັ້ນຮັບເອົາຍິງນັ້ນມາເປັນເມັຽເພື່ອຊ່ວຍໃຫ້ພີ່ນ້ອງຂອງຕົນມີລູກໄວ້ສືບມໍຣະດົກ?’
29ຄອບຄົວຫນຶ່ງມີອ້າຍນ້ອງທີ່ເປັນຜູ້ຊາຍເຈັດຄົນ, ອ້າຍກົກເອົາເມັຽ ແລ້ວຕາຍໄປເມື່ອຍັງບໍ່ມີລູກ.30ຜູ້ທີສອງກໍເອົານາງມາເປັນເມັຽ.
31ແລະເປັນແບບນັ້ນຈົນເຖິງຄົນທີເຈັດກໍຕາຍໄປໂດຍຍັງບໍ່ມີລູກ.32ຕໍ່ມາພາຍຫລັງຍິງນັ້ນກໍຕາຍເຫມືອນກັນ.33ສັນນັ້ນ
ໃນວັນທີ່ມີການເປັນຄືນມາຈາກຕາຍ ຂໍຖາມແດ່ວ່າ ຍິງນັ້ນຈະເປັນເມັຽຂອງຜູ້ໃດ? ເພາະຄົນທັງເຈັດຕ່າງກໍໄດ້ນາງເປັນເມັຽເຫມືອນກັນ.”
34ພຣະເຢຊູເຈົ້າກ່າວກັບເຂົາວ່າ, “ຄົນໃນໂລກນີ້ແຕ່ງງານແລະຖືກຍົກໃຫ້ເປັນຜົວເມັຽກັນ.
35ແຕ່ຄົນທີ່ຊົງສົມຄວນຈະເປັນຄືນມາຈາກຕາຍໃນຍຸກນັ້ນ ຈະບໍ່ມີການແຕ່ງງານ ຫລືຍົກໃຫ້ເປັນຜົວເມັຽກັນອີກ.36ແລະຈະຕາຍບໍ່ໄດ້ອີກ
ເພາະເຂົາຈະເປັນເຫມືອນເທວະດາແລະເປັນບຸດຂອງພຣະເຈົ້າ ເພາະເປັນຜູ້ທີ່ໄດ້ເປັນຄືນມາຈາກຄວາມຕາຍແລ້ວ.
37ສ່ວນເລື່ອງການເປັນຄືນມາຈາກຄວາມຕາຍນັ້ນ ແມ່ນແຕ່ໂມເຊກໍຍັງໄດ້ສະແດງໃຫ້ເຮົາເຫັນຈາກເຫດການທີ່ພຸ່ມໄມ້ນັ້ນ, ທ່ານເອີ້ນອົງພຣະຜູ້-
ເປັນເຈົ້າວ່າຊົງເປັນ ພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ.38ເຫົາກັບພຣະອົງບໍ່ແມ່ນພຣະ-
ເຈົ້າຂອງຄົນຕາຍ, ແຕ່ຊົງເປັນພຣະເຈົ້າຂອງຄົນເປັນ ເພາະທຸກຄົນຕ້ອງເປັນຢູ່ຕໍ່ຫນ້າພຣະອົງ.”
39ພວກທັມະຈານບາງຄົນຈຶ່ງຕອບວ່າ, “ອາຈານເອີຍ ທ່ານເວົ້າຖືກແລ້ວ,”40ພວກເຂົາບໍ່ກ້າຖາມອັນໃດກັບພຣະອົງອີກເລີຍ.
41ພຣະເຢຊູເຈົ້າຖາມພວກເຂົາວ່າ, “ເປັນຫຍັງຄົນທັງຫລາຍເວົ້າວ່າ ພຣະຄຣິດເປັນບຸດຂອງດາວິດ?42ເພາະກະສັດດາ-
ວິດເອງໄດ້ຊົງກ່າວໄວ້ໃນພຣະທັມເພງສັນຣະເສີນວ່າ, ‘ອົງພຣະຜູ້ເປັນເຈົ້າຊົງກ່າວກັບພຣະອົງເຈົ້າຂອງຂ້ານ້ອຍວ່າ,
“ຈົ່ງນັ່ງເບື້ອງຂວາມືຂອງເຮົາ,43ຈົນກວ່າເຮົາຈະປາບສັດຕຣູຂອງທ່ານໃຫ້ຢູ່ໃຕ້ຕີນຂອງທ່ານ”.’44ດັ່ງນັ້ນຖ້າດາວິດຍັງເອີ້ນພຣະຄຣິດວ່າ ‘ອົງພຣະ-
ຜູ້ເປັນເຈົ້າ’ ແລ້ວພຣະອົງຈະເປັນບຸດຂອງດາວິດໄດ້ຢ່າງໃດ.”

[45]ຂະນະທີ່ປະຊາຊົນກຳລັງຟັງຢູ່ນັ້ນ ພຣະອົງກໍກ່າວແກ່ພວກສາວົກຂອງພຣະອົງວ່າ.[46]“ຈົ່ງຣະວັງພວກທັມະຈານໃຫ້ດີ
ພວກເຂົາມັກນຸ່ງເສື້ອຄຸມຍາວ ຍ່າງໄປມາຕາມຕະຫລາດ, ມັກໃຫ້ຄົນຄຳນັບຕົວເປັນພິເສດ, ພວກເຂົາມັກບ່ອນນັ່ງອັນມີກຽດໃນທັມະສ-
າລາແລະຕາມງານລ້ຽງ.[47]ແຕ່ພວກເຂົາມັກກືນກິນຄອບຄົວຂອງແມ່ຫມ້າຍ ແລະແກ້ງອະທິຖານໃຫ້ຍືດຍາວ
ພວກເຂົາຈະຕ້ອງຮັບໂທດຫນັກກວ່າຄົນອື່ນໃນການພິພາກສາ.”


generated on Tue Jun 17 19:01:42 2025

# 21

1ພຣະເຢຊູເຈົ້າເງີຍຫນ້າຂຶ້ນແລະເຫັນເສດຖີຄົນຫນຶ່ງກຳລັງປ່ອນເງິນລົງໃນຕູ້ຖວາຍ. 2ແລ້ວພຣະອົງເຫັນແມ່ຫມ້າຍຍາກຈົນຄົນຫນຶ່ງ
ກຳລັງເອົາເງິນຈຳນວນສອງອັດປ່ອນລົງຖວາຍ. 3ພຣະເຢຊູເຈົ້າກ່າວວ່າ, “ເຮົາບອກຄວາມຈິງວ່າ ແກ່ທ່ານວ່າ ແມ່ຫມ້າຍຍາກ-
ຈົນຜູ້ນີ້ຖວາຍເງິນຫລາຍກວ່າບັນດາຄົນທັງປວງ. 4ເພາະຄົນເຫລົ່ານັ້ນ ໄດ້ຖວາຍເງິນສ່ວນທີ່ເຫລືອໃຊ້, ແຕ່ຍິງຫມ້າຍຍາກຈົນຄົນນີ້ໄດ້
ຖວາຍເງິນທັງຫມົດສຳລັບລ້ຽງຊີວິດຂອງຕົນ.”

5ແລ້ວສາວົກບາງຄົນກ່າວເຖິງພຣະວິຫານ ທີ່ຕົບແຕ່ງດ້ວຍຫີນສວຍງາມແລະເຄື່ອງຖວາຍເຫລົ່ານັ້ນ, ພຣະອົງກ່າວວ່າ.
6“ແຕ່ສິ່ງເຫລົ່ານີ້ທີ່ທ່ານເຫັນ ເມື່ອວັນນັ້ນມາເຖິງ ກ້ອນຫີນຈະພັງລົງຈົນບໍ່ເຫລືອໃຫ້ຊ້ອນທັບກັນຢູ່ເລີຍ.”
7ເຂົາເຫລົ່ານັ້ນຈຶ່ງຖາມພຣະອົງວ່າ, “ທ່ານອາຈານເອີຍ, ເຫດການເຫລົ່ານີ້ຈະເກີດຂຶ້ນເມື່ອໃດ? ແລະສິ່ງໃດຈະເປັນຫມາຍສຳ-
ຄັນວ່າສິ່ງທັງຫມົດນີ້ຈະເກີດຂຶ້ນ?” 8ພຣະເຢຊູເຈົ້າຕອບວ່າ, “ຈົ່ງຣະວັງ, ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ,
ດ້ວຍວ່າຈະມີຫລາຍຄົນມາ ອ້າງນາມຂອງເຮົາ ກ່າວວ່າ ‘ເຮົານີ້ແຫລະເປັນຜູ້ນັ້ນ’ ແລະ‘ເວລາກຳນົດໃກ້ເຂົ້າມາແລ້ວ’ ຢ່າຕາມພວກເຂົາໄປ.
9ເມື່ອທ່ານໄດ້ຍິນສຽງເລື່ອງເສິກສົງຄາມແລະການປັ່ນປ່ວນວຸ້ນວາຍເກີດຂຶ້ນ, ຢ່າຕົກໃຈ ດ້ວຍວ່າສິ່ງເຫລົ່ານີ້ຈຳເປັນຈະຕ້ອງເກີດຂຶ້ນກ່ອນ,
ແຕ່ທີ່ສຸດປາຍນັ້ນຈະບໍ່ມາເຖິງທັນທີ.”
10ແລ້ວພຣະອົງກ່າວແກ່ພວກເຂົາວ່າ, “ປະເທດຈະສູ້ຮົບກັບປະເທດ, ອານາຈັກຈະລຸກຂຶ້ນສູ້ຮົບກັບອານາຈັກ. 11ຈະມີແຜ່ນດິນໄຫວໃຫຍ່ເກີດຂຶ້ນ
ແລະໃນຫລາຍໆບ່ອນຈະເກີດການອຶດຢາກແລະພະຍາດຣະບາດຢ່າງຮ້າຍແຮງ,
ຈະມີເຫດການຫນ້າຢ້ານທີ່ສຸດຫລາຍຢ່າງເກີດຂຶ້ນແລະຫມາຍສຳຄັນຕ່າງໆຈາກຟ້າສະຫວັນ.
12ແຕ່ກ່ອນສິ່ງເຫລົ່ານີ້ທັງຫມົດຈະເກີດຂຶ້ນ ພວກເຂົາຈະຍື່ນມືອອກມາຂົ່ມເຫັງພວກທ່ານ, ສົ່ງທ່ານໄປຍັງທັມະສາລາແລະໃນຄຸກ,
ພາພວກທ່ານໄປຕໍ່ຫນ້າກະສັດແລະຜູ້ປົກຄອງ ເພາະນາມຂອງເຮົາ. 13ສິ່ງນີ້ຈະເປັນໂອກາດໃຫ້ທ່ານໄດ້ເປັນພະຍານ.
14ດັ່ງນັ້ນ ຈົ່ງຕຽມຫົວໃຈຂອງທ່ານໄວ້ໃຫ້ຫມັ້ນຄົງ ຢ່າວິຕົກກັງວົນໄປກ່ອນວ່າຈະແກ້ຂໍ້ຫາເຫລົ່ານັ້ນຢ່າງໃດ? 15ເພາະເຮົາຈະປຣະ-
ທານຖ້ອຍຄຳແລະສະຕິປັນຍານັ້ນແກ່ທ່ານ ຈົນກວ່າສັດຕຣູທັງຫມົດບໍ່ສາມາດຕໍ່ຕ້ານຫລືຂັດຄ້ານທ່ານໄດ້.
16ແຕ່ທ່ານຈະຖືກມອບໄວ້ໃນມືຂອງພໍ່ແມ່ ຍາດຕິພີ່ນ້ອງແລະມິດສະຫາຍ ແລະພວກເຂົາຈະເຮັດໃຫ້ລາງຄົນໃນພວກທ່ານເຖິງແກ່ຄວາມຕາຍ.
17ທຸກຄົນຈະກຽດຊັງທ່ານເພາະນາມຂອງເຮົາ. 18ແມ່ນແຕ່ຜົມພຽງເສັ້ນດຽວຈະບໍ່ລົ່ນເສັຽໄປຈາກຫົວຂອງພວກທ່ານ. 19ທ່ານຈະຮັກສາຊີ-
ວິດຈິດໃຈຂອງທ່ານໄວ້ໃຫ້ລອດເພາະຄວາມພຽນອົດທົນຂອງທ່ານ.
20“ເມື່ອທ່ານເຫັນນະຄອນເຢຣູຊາເລັມຖືກລ້ອມໂດຍກອງທັບຫລວງຫລາຍ, ເມື່ອນັ້ນທ່ານຈົ່ງຮູ້ວ່າເວລາແຫ່ງການທຳລາຍມາເຖິງແລ້ວ.
21ໃຫ້ຄົນທີ່ຢູ່ແຂວງຢູດາຍປົບຫນີໄປຍັງພູ ແລະໃຫ້ຄົນທີ່ຢູ່ໃນເມືອງຫນີອອກໄປ ແລະຢ່າໃຫ້ຄົນທີ່ຢູ່ນອກເມືອງນັ້ນເຂົ້າມາ. 22ເພາະ-
ວ່າວັນເຫລົ່ານີ້ຄືວັນແຫ່ງການລົງໂທດ ເພື່ອໃຫ້ສິ່ງສາຣະພັດທີ່ຖືກຂຽນໄວ້ຈະສຳເລັດເປັນຈິງທຸກປະການ.
23ຫນ້າເວທະນາຕໍ່ຜູ້ຍິງທີ່ມີທ້ອງແລະມີລູກອ່ອນກິນນົມໃນວັນເຫລົ່ານັ້ນ ເພາະຈະມີຄວາມທຸກລຳບາກເກີດຂຶ້ນເທິງແຜ່ນດິນແລະພຣະພິ-
ໂຣດຈະຕົກແກ່ຄົນເຫລົ່ານັ້ນ. 24ແລ້ວພວກເຂົາຈະລົ້ມລົງດ້ວຍຄົມດາບແລະຖືກກວາດໄປເປັນຊະ-
ເລີຍໃນທົ່ວທຸກປະເທດແລະຄົນຕ່າງຊາດຈະຢຽບຢ່ຳນະຄອນເຢຣູຊາເລັມ ຈົນກວ່າຈະຄົບກຳນົດເວລາຂອງພວກເຂົາ.
25ຈະມີຫມາຍສຳຄັນໃນດວງອາທິດ, ດວງຈັນ, ແລະດວງດາວ ໃນໂລກນີ້ ຊົນຊາດຕ່າງໆຈະໄດ້ຮັບຄວາມເຈັບປວດ ພົບກັບຄວາມຫມົດຫວັງ
ເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຟອງນ້ຳ. 26ຈະມີຄົນລົ້ມຕາຍ ເພາະຄວາມຢ້ານ
ດ້ວຍຄວາມຫວາດຫວັ່ນຕໍ່ສິ່ງທີ່ຈະບັງເກີດຂຶ້ນໃນໂລກ ເພາະຣິດເດດແຫ່ງສະຫວັນຈະສັ່ນສະທ້ານຫວັ່ນໄຫວ.
27ພວກເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍຣິດອຳນາດແລະສະຫງ່າຣາສີອັນຍິ່ງໃຫຍ່. 28ເມື່ອເຫດການເຫລົ່ານີ້ທັງຫມົດເລີ່ມຕົ້ນ-
ເກີດຂຶ້ນ ຈົ່ງລຸກຂຶ້ນແລະເງີຍຫນ້າຂຶ້ນ, ເພາະການປົດປ່ອຍຂອງທ່ານມາໃກ້ແລ້ວ.”
29ພຣະເຢຊູເຈົ້າກ່າວກັບເຂົາເປັນຄຳອຸປະມາວ່າ, “ຈົ່ງເບິ່ງຕົ້ນເດື່ອເທດແລະຕົ້ນໄມ້ທັງຫມົດ. 30ເມື່ອຕົ້ນພວກມັນປົ່ງໃບອອກແລ້ວ
ທ່ານກໍຈະຮູ້ວ່າຣະດູຮ້ອນໃກ້ຈະເຖິງແລ້ວ. 31ຢ່າງດຽວກັນນັ້ນ, ເມື່ອທ່ານເຫັນເຫດການເຫລົ່ານີ້ເກີດຂຶ້ນ ຈົ່ງຮູ້ວ່າຣາຊະອານາຈັກຂອງພຣະ-
ເຈົ້າໃກ້ຈະເຖິງແລ້ວ.
32ເຮົາບອກຄວາມຈິງແກ່ທ່ານວ່າ ຄົນໃນຍຸກນີ້ຈະບໍ່ລ່ວງລັບໄປ ຈົນກວ່າເຫດການເຫລົ່ານີ້ຈະເກີດຂຶ້ນ. 33ຟ້າແລະດິນຈະລ່ວງພົ້ນໄປ,
ແຕ່ຖ້ອຍຄຳຂອງເຮົາຈະບໍ່ສູນຫາຍໄປຈັກເທື່ອ.
34ແຕ່ຈົ່ງຣະວັງຕົວທ່ານໃຫ້ດີ ຢ່າໃຫ້ໃຈຂອງພວກທ່ານຫນັກໄປໃນການກິນລ້ຽງແລະ, ຄວາມມົວເມົາແລະວິຕົກກັງວົນໃນຊີວິດ
ເພາະວັນນັ້ນຈະມາເຖິງພວກທ່ານໃນທັນທີເຫມືອນດັ່ງກັບດັກ. 35ເພາະສິ່ງນີ້ຈະຕົກໃສ່ທຸກຄົນ ທີ່ມີຊີວິດຢູ່ເທິງແຜ່ນດິນໂລກ.
36ແຕ່ຈົ່ງເຝົ້າຣະວັງຕະຫລອດເວລາ, ຈົ່ງອະທິຖານເພື່ອທ່ານຈະເຂັ້ມແຂງຈົນສາມາດຫລີກຫນີ ຈາກເຫດການທີ່ຈະເກີດຂຶ້ນ
ແລະເພື່ອຈະຢືດຫມັ້ນຢູ່ຕໍ່ຫນ້າຂອງບຸດມະນຸດໄດ້.”
37ໃນຊ່ວງເວລາກາງເວັນ ພຣະອົງສັ່ງສອນຢູ່ໃນບໍຣິເວນພຣະວິຫານ, ສ່ວນຕອນກາງຄືນກໍສະເດັດອອກໄປຂ້າງນອກ
ເພື່ອອະທິຖານຢູ່ທີ່ພູເຂົາຫມາກກອກເທດ. 38ມີຝູງຄົນມາລໍຖ້າຟັງຄຳສອນຂອງພຣະອົງໃນບໍຣິເວນພຣະວິຫານຕັ້ງແຕ່ຂ້ອນເຊົ້າ.

 generated on Tue Jun 17 19:01:42 2025

22 [1]ເມື່ອໃກ້ຈະຮອດເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງທີ່ເອີ້ນວ່າປັດສະຄາ.[2]ພວກຫົວຫນ້າປະໂລຫິດແລະພວກທັມະຈານ ກໍປຶກສາກັນວ່າ
ຈະເຮັດຢ່າງໃດດີຈຶ່ງຈະຂ້າພຣະເຢຊູໄດ້ ເພາະເຂົາຢ້ານປະຊາຊົນ.

[3]ຊາຕານໄດ້ເຂົ້າສູນໃຈຢູດາອິສະກາຣີອົດ ຊຶ່ງເປັນຄົນຫນຶ່ງໃນພວກສາວົກສິບສອງຄົນ.[4]ຢູດາໄດ້ອອກໄປປຶກສາກັບພວກຫົວຫນ້າປະໂລ-
ຫິດແລະພວກນາຍທະຫານ ເຖິງແຜນການທີ່ເພິ່ນຈະມອບພຣະເຢຊູເຈົ້າໃຫ້ກັບພວກເຂົາ.
[5]ຄົນເຫລົ່ານັ້ນດີໃຈຫລາຍແລະຕົກລົງກັນວ່າຈະເອົາເງິນໃຫ້ແກ່ຢູດາ.[6]ສ່ວນຢູດາຈຶ່ງຕອບຕົກລົງ ແລະພະຍາຍາມຊອກຫາໂອ-
ກາດທີ່ຈະມອບພຣະອົງໃຫ້ແກ່ພວກເຂົາ ໃນສະຖານທີ່ຫ່າງໄກຈາກປະຊາຊົນ.
[7]ເມື່ອເຖິງວັນກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເຊິ່ງເປັນວັນທີ່ລູກແກະປັດສະຄາຕ້ອງຖືກຖວາຍເປັນເຄື່ອງບູຊາ.[8]ພຣະເຢຊູເຈົ້າຈຶ່ງໃຊ້ເປໂຕແລະໂຢ-
ຮັນໄປໂດຍສັ່ງເຂົາວ່າ, “ຈົ່ງໄປແລະຈັດແຈງອາຫານປັດສະຄາສຳລັບພວກເຮົາ ເພື່ອທີ່ຈະໄດ້ຮັບປະທານຮ່ວມກັນ.”[9]ເຂົາທູນຖາມພຣະອົງວ່າ,
“ພຣະອົງຢາກຈະໃຫ້ພວກຂ້ານ້ອຍໄປຈັດຕຽມໄວ້ບ່ອນໃດ?”
[10]ພຣະເຢຊູເຈົ້າຕອບພວກເຂົາວ່າ, “ຟັງເດີ, ເມື່ອພວກທ່ານເຂົ້າໄປໃນເມືອງ, ຈະມີຊາຍຄົນຫນຶ່ງແບກຫມໍ້ນ້ຳມາພົບທ່ານ
ຈົ່ງຕາມເຂົ້າໃນເຮືອນທີ່ຜູ້ນັ້ນຈະເຂົ້າໄປ.[11]ແລ້ວບອກກັບເຈົ້າເຮືອນນັ້ນວ່າ ‘ອາຈານໃຫ້ຖາມທ່ານວ່າ, "ຫ້ອງຮັບແຂກທີ່ເຮົາຈະກິນປັດສະ-
ຄາກັບພວກສາວົກຂອງເຮົາຢູ່ທີ່ໃດ?’"
[12]ເຂົາຈະຊີ້ໃຫ້ພວກທ່ານເຫັນຫ້ອງໃຫຍ່ຊັ້ນເທິງ ທີ່ຕົກແຕ່ງໄວ້ແລ້ວ,"[13]ດັ່ງນັ້ນ, ພວກເຂົາຈຶ່ງໄປແລະພົບທຸກສິ່ງເຫມືອນຢ່າງພຣະ-
ອົງຊົງກ່າວແກ່ພວກເຂົາ, ແລ້ວພວກເຂົາໄດ້ຈັດຕຽມອາຫານປັດສະຄາທີ່ນັ້ນ.
[14]ເມື່ອເຖິງໂມງແລ້ວ ພຣະອົງຊົງນັ່ງລົງກັບພວກອັກຄະສາວົກ.[15]ພຣະອົງກ່າວກັບພວກເຂົາວ່າ, “ເຮົາມີຄວາມປາຖນາຢ່າງຍິ່ງ
ທີ່ຈະກິນອາຫານປັດສະຄານີ້ກັບພວກທ່ານ ກ່ອນເຮົາຈະຕ້ອງທຸກທໍຣະມານ.[16]ເພາະເຮົາບອກພວກທ່ານທັງຫລາຍວ່າ, ເຮົາຈະບໍ່ກິນປັດສະ-
ຄານີ້ອີກ ຈົນກວ່າສິ່ງນັ້ນຈະສຳເລັດໃນຣາຊະອານາຈັກຂອງພຣະເຈົ້າ.”
[17]ແລ້ວພຣະເຢຊູເຈົ້າຊົງຈັບເອົາຈອກແລະເມື່ອພຣະອົງຊົງໂມທະນາຂອບພຣະຄຸນແລ້ວ ຊົງກ່າວວ່າ, “ຈົ່ງເອົາຈອກນີ້ແຈກຢາຍໃນພວກທ່ານ.
[18]ເພາະເຮົາບອກທ່ານທັງຫລາຍວ່າ ເຮົາຈະບໍ່ດື່ມຈາກຜົນອະງຸ່ນອີກ ຈົນກວ່າຣາຊະອານາຈັກຂອງພຣະເຈົ້າຈະມາເຖິງ.”
[19]ແລ້ວພຣະເຢຊູເຈົ້າຊົງຈັບເຂົ້າຈີ່ມາແລະເມື່ອໂມທະນາຂອບພຣະຄຸນແລ້ວ ພຣະອົງຊົງຫັກເຂົ້າຈີ່ ແລະຊົງກ່າວວ່າ, “ນີ້
ຄືກາຍຂອງເຮົາທີ່ໃຫ້ແກ່ທ່ານທັງຫລາຍ, ຈົ່ງເຮັດຢ່າງນີ້ ເພື່ອເປັນທີ່ຣະນຶກເຖິງເຮົາ.”[20]ພຣະອົງຊົງຈັບເອົາຈອກນັ້ນ
ດ້ວຍອາການຢ່າງດຽວກັນຫລັງຮັບປະທານເຂົ້າແລງແລ້ວ, ແລະກ່າວວ່າ, “ຈອກນີ້ເປັນພັນທະສັນຍາໃຫມ່ໃນເລືອດຂອງເຮົາ
ທີ່ຖອກອອກເພື່ອພວກທ່ານ."
[21]ຈົ່ງຕັ້ງໃຈຟັງໃຫ້ດີ, ມີຄົນຫນຶ່ງທີ່ທໍຣະຍົດເຮົາຢູ່ຮ່ວມໂຕະກັບເຮົາທີ່ນີ້.[22]ເພາະອັນທີ່ຈິງບຸດມະນຸດຈະເປັນໄປຕາມທີ່ໄດ້ກຳນົດໄວ້ແລ້ວ, ແຕ່ວິ-
ບັດແກ່ຊາຍຜູ້ນັ້ນຜ່ານທາງຜູ້ທີ່ເຂົາໄດ້ທໍຣະຍົດ!"[23]ພວກສາວົກກໍເລີ່ມຕົ້ນຖາມກັນເອງ ວ່າໃຜໃນພວກເຂົາທີ່ຈະເຮັດເຊັ່ນນັ້ນ.
[24]ມີການໂຕ້ຖຽງກັນເກີດຂຶ້ນໃນພວກສາວົກວ່າໃນພວກເພິ່ນທີ່ຖືວ່າເປັນຜູ້ໃຫຍ່ທີ່ສຸດ.[25]ພຣະເຢຊູເຈົ້າຈຶ່ງກ່າວກັບພວກເພິ່ນວ່າ,
“ບັນດາກະສັດຂອງຄົນຕ່າງຊາດເປັນເຈົ້ານາຍແລະມີອຳນາດເຫນືອພວກເຂົາ ແລະໄດ້ຮັບການເອີ້ນເພິ່ນວ່າເປັນຜູ້ຄອບຄອງທີ່ມີກຽດ.
[26]ແຕ່ບໍ່ເປັນຢ່າງນັ້ນໃນພວກທ່ານ. ແທນທີ່ຈະເປັນຢ່າງນັ້ນ ຂໍໃຫ້ຄົນທີ່ຍິ່ງໃຫຍ່ທີ່ສຸດໃນພວກທ່ານ, ຈົ່ງເປັນເຫມືອນກັບຜູ້ທີ່ເລັກນ້ອຍທີ່ສຸດ,
ແລະຂໍໃຫ້ຜູ້ທີ່ເປັນຄົນສຳຄັນທີ່ສຸດ ຈົ່ງເປັນເຫມືອນກັບຄົນຮັບໃຊ້.[27]ເພາະວ່າໃຜທີ່ຍິ່ງໃຫຍ່ກວ່າກັນ? ຄົນທີ່ນັ່ງຢູ່ໂຕະ, ຫລືຄົນທີ່ຮັບໃຊ້
ຄົນທີ່ນັ່ງຢູ່ໂຕະບໍ່ແມ່ນບໍ? ເຮົາຢູ່ຖ້າມກາງພວກທ່ານເຫມືອນກັບເປັນຄົນທີ່ຮັບໃຊ້.
[28]ແຕ່ພວກທ່ານເປັນຄົນທີ່ຍັງຢູ່ກັບເຮົາເມື່ອເຮົາເຂົ້າສູ່ການທົດລອງ.[29]ເຮົາໄດ້ມອບຣາຊະອານາຈັກໃຫ້ແກ່ທ່ານ ຢ່າງທີ່ພຣະບິ-
ດາເຈົ້າຂອງເຮົາໄດ້ມອບຣາຊະອານາຈັກໃຫ້ແກ່ເຮົາ.[30]ເພື່ອທີ່ພວກທ່ານຈະໄດ້ກິນແລະດື່ມທີ່ໂຕະຂອງເຮົາໃນຣາຊະອານາຈັກຂອງເຮົາ,
ແລະເພື່ອພວກທ່ານຈະໄດ້ນັ່ງເທິງບັນລັງເພື່ອພິພາກສາທັງສິບສອງເຜົ່າຂອງອິສຣາເອນ.
[31]ຊີໂມນເອີຍ, ຊີໂມນເອີຍ ຈົ່ງຣະວັງໃຫ້ດີ, ຊາຕານໄດ້ຂໍທີ່ຈະທຳຮ້າຍທ່ານ ມັນຈະຝັດຮ່ອນທ່ານເຫມືອນຝັດເຂົ້າສາລີ.
[32]ແຕ່ເຮົາໄດ້ອະທິຖານສຳລັບທ່ານ ເພື່ອຄວາມເຊື່ອຂອງທ່ານຈະບໍ່ລົ້ມລົງ. ຫລັງຈາກທີ່ທ່ານໄດ້ຫັນກັບຄືນມາແລ້ວ, ທ່ານຈົ່ງຫນູນກຳລັງພີ່-
ນ້ອງຂອງທ່ານ.”
[33]ເປໂຕທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າເອີຍ, ຂ້ານ້ອຍພ້ອມທີ່ຈະໄປກັບພຣະອົງ, ບໍ່ວ່າຈະຕ້ອງຕິດຄຸກ
ຫລືຕາຍກໍຕາມ.”[34]ພຣະເຢຊູເຈົ້າກ່າວວ່າ, “ ເປໂຕເອີຍ, ໃນວັນນີ້, ທ່ານຈະໄດ້ປະຕິເສດວ່າບໍ່ຮູ້ຈັກເຮົາເຖິງສາມເທື່ອ ກ່ອນໄກ່ຂັນ.”
[35]ແລ້ວພຣະເຢຊູເຈົ້າຊົງກ່າວກັບພວກສາວົກວ່າ, “ເມື່ອເຮົາໄດ້ໃຊ້ທ່ານທັງຫລາຍອອກໄປ ໂດຍບໍ່ມີກະເປົາເງິນ, ບໍ່ມີຖົງໃສ່ອາຫານ, ຫລືເກີບນັ້ນ,
ພວກທ່ານໄດ້ຂາດເຂີນສິ່ງໃດແດ່?” ພວກເຂົາທູນຕອບວ່າ, “ບໍ່ໄດ້ຂາດເຂີນສິ່ງໃດເລີຍ.”[36]ພຣະອົງຈຶ່ງກ່າວກັບພວກເພິ່ນວ່າ, “ແຕ່ຕອນນີ້
ຄົນທີ່ມີກະເປົາເງິນ ກໍໃຫ້ຖືຕິດຕົວໄປແລະຖົງໃສ່ອາຫານກໍໃຫ້ຖືໄປເຫມືອນກັນ, ຄົນທີ່ບໍ່ມີດາບກໍໃຫ້ຂາຍເສື້ອຄຸມຂອງຕົນ ແລ້ວຊື້ດາບມາ.
[37]ເພາະເຮົາບອກທ່ານວ່າ, ສິ່ງທີ່ຂຽນໄວ້ກ່ຽວກັບເຮົາຈະຕ້ອງສຳເລັດ, ‘ທ່ານຖືກນັບເຂົ້າກັບຄົນອະທັມ’
ເພາະຄຳທຳນວຍກ່ຽວກັບເຮົານັ້ນກໍຈະຕ້ອງສຳເລັດ.”[38]ແລ້ວພວກເຂົາທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ເບິ່ງແມ ມີດາບສອງດວງຢູ່ທີ່ນີ້”
ແລະພຣະອົງຊົງຕອບເຂົາວ່າ, “ພໍແລ້ວ.”
[39]ຫລັງກິນອາຫານແລງ, ພຣະເຢຊູເຈົ້າໄດ້ສະເດັດໄປຍັງພູເຂົາຫມາກກອກເທດຕາມເຄີຍ ແລະພວກສາວົກໄດ້ຕາມພຣະອົງໄປ.
[40]ເມື່ອພວກເຂົາມາເຖິງ, ພຣະອົງຊົງກ່າວກັບເຂົາວ່າ, “ຈົ່ງອະທິຖານ ເພື່ອທີ່ພວກທ່ານຈະບໍ່ໄດ້ເຂົ້າໃນການທົດລອງ.”
[41]ພຣະອົງສະເດັດອອກໄປຫ່າງຈາກພວກເຂົາປະມານຄວ່າງກ້ອນຫີນເຖິງ. ພຣະອົງຊົງຄຸເຂົ່າລົງແລະອະທິຖານວ່າ,[42]“ພຣະບິດາເຈົ້າເອີຍ,
ຖ້າຫາກເປັນນ້ຳພຣະທັຍຂອງພຣະອົງ ຂໍຊົງເລື່ອນຈອກນີ້ອອກໄປຈາກຂ້າພຣະອົງຖ້ອນ. ແຕ່ຢ່າງໃດກໍຕາມ,
ຢ່າໃຫ້ເປັນໄປຕາມໃຈຂອງຂ້າພຣະອົງ, ແຕ່ໃຫ້ເປັນຕາມພຣະປະສົງຂອງພຣະບິດາເຈົ້າເຖີ້ນ.”
[43]ແລ້ວມີເທວະດາຕົນຫນຶ່ງຈາກສະຫວັນມາປາກົດແກ່ພຣະອົງ, ຊູກຳລັງພຣະອົງຂຶ້ນ.[44]ເມື່ອພຣະອົງຊົງທົນທຸກ ພຣະ-
ອົງກໍຍິ່ງອະທິຖານຢ່າງຈິງຈັງຫລາຍຂຶ້ນ, ຈົນເຫື່ອຂອງພຣະອົງເກີດເປັນເຫມືອນເລືອດເມັດໃຫຍ່ໄຫລຢາດລົງສູ່ພື້ນດິນ.

 generated on Tue Jun 17 19:01:42 2025

[45]ພຣະອົງຊົງລຸກຂຶ້ນຈາກການອະທິຖານ ແລະສະເດັດມາຫາພວກສາວົກແລະຊົງເຫັນວ່າພວກເຂົາກຳລັງນອນຫລັບຢູ່ ເພາະຄວາມ-
ທຸກໂສກເສົ້າ,[46]ພຣະອົງຈຶ່ງຖາມພວກເຂົາວ່າ, “ເປັນຫຍັງຈຶ່ງຍັງນອນຫລັບຢູ່? ຈົ່ງລຸກຂຶ້ນແລະອະທິຖານ
ເພື່ອພວກທ່ານຈະບໍ່ຕົກໃນການທົດລອງ.”
[47]ຂະນະທີ່ພຣະອົງຊົງກ່າວຢູ່ນັ້ນ, ເບິ່ງແມ, ມີຄົນຈຳນວນ ຫລາຍປາກົດຕົວຂຶ້ນ ພ້ອມກັບຢູດາຫນຶ່ງໃນສາວົກສິບສອງຄົນ
ທີ່ໄດ້ນຳຫນ້າພວກເຂົາມາ ຢູດາໄດ້ຫຍັບເຂົ້າມາໃກ້ພຣະເຢຊູເຈົ້າແລະຈູບພຣະອົງ.[48]ແຕ່ພຣະເຢຊູເຈົ້າຊົງຖາມວ່າ, “ຢູດາເອີຍ,
ເຈົ້າຈະທໍຣະຍົດຕໍ່ບຸດມະນຸດດ້ວຍການຈູບບໍ?”
[49]ເມື່ອພວກສາວົກທີ່ອ້ອມຮອບພຣະເຢຊູເຈົ້າຢູ່ ໄດ້ເຫັນວ່າແມ່ນຫຍັງຈະເກີດຂຶ້ນ, ພວກເຂົາຈຶ່ງທູນພຣະອົງວ່າ, ‘ອົງພຣະຜູ້ເປັນເຈົ້າ
ຈະໃຫ້ພວກຂ້ານ້ອຍເອົາດາບມາຕໍ່ສູ້ບໍ?”[50]ແລ້ວມີຜູ້ຫນຶ່ງໃນພວກເພິ່ນໄດ້ຟັນຄົນຮັບໃຊ້ຂອງມະຫາປະໂຣຫິດ ແລະຟັນຫູຂວາຂອງເຂົາຂາດ.
[51]ພຣະເຢຊູເຈົ້າກ່າວວ່າ, ເຊົາແມ “ພໍແລ້ວ” ແລ້ວພຣະອົງຊົງບາຍຫູຄົນນັ້ນແລະຮັກສາເຂົາໃຫ້ຫາຍດີ.
[52]ພຣະເຢຊູເຈົ້າກ່າວກັບພວກຫົວຫນ້າປະໂລຫິດ ກັບພວກນາຍທະຫານທີ່ຮັກສາພຣະວິຫານ, ແລະພວກເຖົ້າແກ່ທີ່ອອກມາຕໍ່ສູ້ພຣະອົງນັ້ນວ່າ,
“ພວກທ່ານອອກມາຕໍ່ສູ້ເຮັດຄືວ່າເຮົາເປັນໂຈນ, ດ້ວຍດາບແລະດ້ວຍຕະບອງບໍ?[53]ເມື່ອເຮົາຢູ່ກັບພວກທ່ານໃນພຣະວິຫານທຸກວັນນັ້ນ,
ພວກທ່ານບໍ່ໄດ້ຍື່ນມືຕໍ່ສູ້ເຮົາ, ແຕ່ນີ້ເປັນເວລາຂອງທ່ານ, ແລະເປັນອຳນາດແຫ່ງຄວາມມືດ.”
[54]ພວກເຂົາຈັບກຸມພຣະອົງ ແລະຄຸມພຣະອົງໄປທີ່ເຮືອນຂອງມະຫາປະໂລຫິດ, ແຕ່ເປໂຕໄດ້ຕິດຕາມໄປຫ່າງໆ.[55]ຫລັງຈາກທີ່ພວກເຂົາດັງ-
ໄຟທີ່ກາງເດີ່ນບ້ານແລະນັ່ງລົງຢູ່ດ້ວຍກັນ ເປໂຕກໍເຂົ້າຢູ່ທ່າມກາງພວກເຂົາ.
[56]ສາວໃຊ້ຄົນຫນຶ່ງເຫັນເປໂຕນັ່ງຜີງໄຟຢູ່ ແລະເພັ່ງເບິ່ງແລ້ວເວົ້າວ່າ, “ຊາຍຄົນນີ້ຢູ່ກັບເພິ່ນນຳ.”[57]ແຕ່ເປໂຕຕອບປະຕິເສດແລະບອກວ່າ
“ຍິງເອີຍ, ຂ້ອຍບໍ່ຮູ້ຈັກເພິ່ນເລີຍ.”[58]ຫລັງຈາກນັ້ນບໍ່ດົນກໍມີຊາຍອີກຄົນຫນຶ່ງເຫັນເປໂຕແລະບອກວ່າ, “ເຈົ້າເປັນຄົນຫນຶ່ງໃນພວກເພິ່ນ” ແຕ່ເປ-
ໂຕບອກວ່າ “ຊາຍເອີຍ, ຂ້ອຍບໍ່ໄດ້ເປັນ.”
[59]ຫລັງຈາກນັ້ນປະມານຫນຶ່ງຊົ່ວໂມງ ກໍມີອີກຄົນຫນຶ່ງຢືນຢັນຢ່າງແຂງແຮງ ວ່າ, “ແມ່ນແທ້ແລ້ວ, ຊາຍຄົນນີ້ຢູ່ກັບຄົນນັ້ນດ້ວຍ,
ເພາະລາວເປັນຄົນຄາລີເລ.”[60]ເປໂຕຕອບວ່າ, “ຊາຍເອີຍ, ທີ່ທ່ານເວົ້ານັ້ນ ຂ້ອຍບໍ່ຮູ້ເລື່ອງເລີຍ” ໃນທັນໃດນັ້ນ ຂະນະທີ່ເປໂຕຍັງເວົ້າຢູ່ໄກ່ກໍຂັນ.
[61]ອົງພຣະຜູ້ເປັນເຈົ້າໄດ້ຊົງຫລຽວເບິ່ງເປໂຕ, ແລ້ວເປໂຕກໍຣະນຶກເຖິງຖ້ອຍຄຳທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງກ່າວແກ່ຕົນວ່າ, “ກ່ອນໄກ່ຂັນວັນນີ້
ທ່ານຈະປະຕິເສດເຮົາເຖິງສາມເທື່ອ.”[62]ເປໂຕກໍອອກໄປຂ້າງນອກແລະຮ້ອງໄຫ້ຢ່າງຂົມຂື່ນເປັນທຸກຫນັກໃຈ.
[63]ພວກທີ່ຄຸມພຣະເຢຊູເຈົ້າກໍເຍາະເຍີ້ຍແລະທຸບຕີພຣະອົງ.[64]ຫລັງຈາກທີ່ພວກເຂົາເອົາຜ້າມັດຕາພຣະອົງແລ້ວ ກໍຖາມພຣະອົງວ່າ,
“ທວາຍເບິ່ງດູວ່າໃຜຕີເຈົ້າ?”[65]ພວກເຂົາເວົ້າອີກຫລາຍປະການກ່ຽວກັບພຣະເຢຊູເຈົ້າ ເປັນການຫມິ່ນປະມາດພຣະອົງ.
[66]ຄັນຮຸ່ງເຊົ້າ ບັນດາພວກເຖົ້າແກ່ຂອງປະຊາຊົນກໍມາຊຸມນຸມກັນ, ລວມທັງພວກຫົວຫນ້າປະໂຣຫິດແລະພວກນັກທັມະຈານ.
ພວກເຂົາໄດ້ພາພຣະອົງເຂົ້າໄປໃນສານສູງສຸດ,[67]ແລະເວົ້າວ່າ, “ຖ້າທ່ານເປັນພຣະຄຣິດ ຈົ່ງບອກເຮົາມເຖີດ” ແຕ່ພຣະອົງຊົງຕອບເຂົາວ່າ,
“ຖ້າເຮົາບອກທ່ານ, ທ່ານກໍຈະບໍ່ເຊື່ອເຮົາ,[68]ແລະຖ້າເຮົາຖາມພວກເຈົ້າ, ພວກເຈົ້າກໍຈະບໍ່ຕອບເຮົາ.
[69]ຕັ້ງແຕ່ນີ້ໄປ, ບຸດມະນຸດຈະນັ່ງເບື້ອງຂວາຂອງພຣະເຈົ້າຜູ້ຊົງຣິດອຳນາດຍິ່ງໃຫຍ່.”[70]ພວກເຂົາທຸກຄົນຈຶ່ງເວົ້າວ່າ, “ທ່ານເປັນພຣະ-
ບຸດຂອງພຣະເຈົ້າບໍ?” ແລະພຣະເຢຊູເຈົ້າຕອບພວກເຂົາວ່າ, “ທ່ານກໍບອກແລ້ວວ່າເຮົາເປັນ.”[71]ພວກເຂົາເວົ້າວ່າ,
“ເປັນຫຍັງພວກເຮົາຍັງຈະຕ້ອງການພະຍານອັນໃດອີກ? ເພາະເຮົາກໍໄດ້ຍິນກັບຫູຕົວເອງຈາກປາກຂອງມັນເອງແລ້ວ.”


generated on Tue Jun 17 19:01:42 2025

23 [1]ພວກເຂົາທັງຫມົດໄດ້ລຸກຂຶ້ນແລະພາພຣະເຢຊູເຈົ້າໄປຫາປີລາດ.[2]ພວກເຂົາເລີ່ມກ່າວຫາພຣະເຢຊູເຈົ້າວ່າ,
"ພວກເຮົາພົບວ່າຊາຍຄົນນີ້ໄດ້ຊັກຊວນຊົນຊາດຂອງເຮົາໃຫ້ຫລົງໄປ, ດ້ວຍການຫ້າມບໍ່ໃຫ້ເສັຍສ່ວຍແກ່ກາຍ-
ຊາແລະຊາຍຄົນນີ້ກ່າວວ່າຕົວເອງເປັນພຣະຄຣິດແລະເປັນກະສັດ."

[3]ປີລາດຖາມພຣະເຢຊູເຈົ້າວ່າ, "ທ່ານເປັນກະສັດຂອງຄົນຢິວບໍ?" ແລະພຣະເຢຊູເຈົ້າຕອບວ່າ, "ກໍທ່ານເວົ້ານີ້."[4]ປີ-
ລາດຈຶ່ງເວົ້າກັບພວກຫົວຫນ້າປະໂຣຫິດແລະກັບປະຊາຊົນນັ້ນວ່າ, "ເຮົາບໍ່ພົບຄວາມຜິດຂອງຊາຍຄົນນີ້ຈັກປະ-
ການເລີຍ."[5]ແຕ່ພວກເຂົາກ່າວຄຳແຂງຂຶ້ນວ່າ, "ຊາຍຄົນນີ້ໄດ້ຍຸຍົງປະຊາຊົນໃຫ້ວຸ້ນວາຍ ແລະສັ່ງສອນທົ່ວແຂວງຢູດາຍເລີ່ມຕົ້ນແຕ່ແຂວງຄາ-
ລີເລຈົນມາເຖິງທີ່ນີ້."
[6]ດັ່ງນັ້ນເມື່ອປີລາດໄດ້ຍິນເລື່ອງນີ້ ທ່ານຈຶ່ງຖາມວ່າ ຊາຍຄົນນີ້ເປັນຊາວຄາລີເລບໍ?[7]ເມື່ອປີລາດຮູ້ວ່າພຣະອົງຢູ່ພາຍໃຕ້ການປົກຄອງຂອງເຮໂຣດ,
ທ່ານຈຶ່ງສົ່ງພຣະເຢຊູເຈົ້າໄປຫາເຮໂຣດ ຜູ້ຊຶ່ງພັກຢູ່ໃນນະຄອນເຢຣູຊາເລັມໃນເວລານັ້ນ.
[8]ເມື່ອເຮໂຣດເຫັນພຣະເຢຊູເຈົ້າທ່ານກໍມີຄວາມຍິນດີຫລາຍ, ດ້ວຍວ່າທ່ານຢາກພົບກັບພຣະເຢຊູມາແຕ່ດົນແລ້ວ;
ເພາະທ່ານໄດ້ຍິນເຖິງເລື່ອງຂອງພຣະອົງແລະຫວັງວ່າຈະເຫັນການອັດສະຈັນບາງປະການຈາກພຣະເຢຊູເຈົ້າ.
[9]ເຮໂຣດໄດ້ຖາມພຣະເຢຊູເຈົ້າຫລາຍຂໍ້, ແຕ່ພຣະເຢຊູເຈົ້າບໍ່ໄດ້ຕອບສິ່ງໃດເລີຍ.[10]ຝ່າຍພວກຫົວຫນ້າມະຫາປະໂລຫິດແລະພວກ-
ທັມະຈານໄດ້ລຸກຂຶ້ນຢືນ ແລະກ່າວຟ້ອງພຣະອົງຢ່າງຮຸນແຮງ.
[11]ຝ່າຍເຮໂຣດກັບພວກທະຫານຂອງທ່ານໄດ້ດູຫມິ່ນແລະກ່າວເຍາະເຍີ້ຍພຣະອົງແລະເອົາເສື້ອໂຕງົດງາມມາຫົ່ມໃຫ້ພຣະອົງ, ແລ້ວສົ່ງພຣະ-
ອົງຄືນໄປຫາປີລາດອີກ.[12]ເຮໂຣດແລະປີລາດຈຶ່ງໄດ້ກາຍເປັນມິດຕໍ່ກັນໃນວັນນັ້ນ (ກ່ອນຫນ້ານີ້ພວກເຂົາເປັນສັດຕຣູກັນ).
[13]ຈາກນັ້ນປີລາດຈຶ່ງໄດ້ເອີ້ນພວກຫົວຫນ້າປະໂລຫິດ, ພວກເຈົ້ານາຍ, ກັບປະຊາຊົນໃຫ້ມາປະຊຸມພ້ອມກັນ.[14]ແລະປີລາດກ່າວແກ່ພວກເຂົາວ່າ,
"ພວກທ່ານພາຄົນນີ້ມາຫາເຮົາເຫມືອນກັບວ່າຊາຍຄົນນີ້ໄດ້ຊັກຊວນປະຊາຊົນໃຫ້ເຮັດໃນສິ່ງຊົ່ວຊ້າ, ແລະເບິ່ງແມ, ເຮົາໄດ້ສືບສວນຕໍ່-
ຫນ້າພວກທ່ານແລະເຮົາບໍ່ເຫັນວ່າຊາຍຄົນນີ້ມີຄວາມຜິດຕາມທີ່ທ່ານກ່າວຟ້ອງເພິ່ນ.
[15]ເຮໂຣດກໍບໍ່ເຫັນວ່າເພິ່ນມີຄວາມຜິດເພາະເຂົາສົ່ງຕົວຊາຍຄົນນີ້ກັບມາຫາເຮົາອີກ. ເບິ່ງແມ, ຊາຍຄົນນີ້ບໍ່ໄດ້ເຮັດຜິດອັນໃດທີ່ເພິ່ນ-
ຄວນຈະມີໂທດເຖິງຕາຍ.[16]ດັ່ງນັ້ນ ເຮົາຈຶ່ງສັ່ງໃຫ້ຂ້ຽນເພິ່ນແລະປ່ອຍເພິ່ນໄປ."[17]ດ້ວຍວ່າ, ໃນງານເທສະການນັ້ນ
ເພິ່ນຕ້ອງປ່ອຍຄົນຫນຶ່ງໃຫ້ພວກເຂົາ.
[18]ແຕ່ປະຊາຊົນເຫລົ່ານັ້ນຮ້ອງຂຶ້ນພ້ອມກັນວ່າ, "ຈົ່ງຂ້າຊາຍຄົນນີ້, ແລ້ວຈົ່ງປ່ອຍບາຣາບາໃຫ້ກັບພວກເຮົາ."[19]ບາຣາບານັ້ນກໍຍັງຕິດຄຸກຢູ່,
ເພາະການຈະຣາຈົນທີ່ເກີດຂຶ້ນໃນເມືອງແລະຂ້າຄົນ.
[20]ປີລາດນັ້ນຍັງຕ້ອງການຢາກປ່ອຍພຣະເຢຊູເຈົ້າຈຶ່ງກ່າວກັບເຂົາອີກຄັ້ງຫນຶ່ງ.[21]ແຕ່ພວກເຂົາໄດ້ຮ້ອງຕອບກັບວ່າ, "ຄຶງມັນເສັຍ, ຄຶງມັນເສັຍ".
[22]ປີລາດຈຶ່ງຖາມພວກເຂົາເປັນເທື່ອທີສາມວ່າ, "ຄຶງເຮັດຫຍັງ ຄົນນີ້ໄດ້ເຮັດຊົ່ວຮ້າຍອັນໃດ? ເຮົາບໍ່ພົບເຫດຜົນອັນໃດທີ່ເພິ່ນສົມ-
ຄວນຈະຮັບໂທດເຖິງຕາຍ, ດັ່ງນັ້ນຫລັງຈາກທີ່ເຮົາລົງໂທດແລ້ວເຮົາຈະປ່ອຍເພິ່ນເສັຽ."
[23]ແຕ່ພວກເຂົາປຸກຣະດົມພ້ອມກັນຮ້ອງສຽງດັງ
ເພື່ອຮຽກຮ້ອງໃຫ້ນຳພຣະເຢຊູເຈົ້າໄປຄຶງທີ່ໄມ້ກາງແຂນແລະສຽງຂອງພວກເຂົາກໍສາມາດໂນ້ມນ້າວປີລາດໄດ້.[24]ດັ່ງນັ້ນ, ປີ-
ລາດຈຶ່ງສັ່ງໃຫ້ເປັນໄປຕາມທີ່ເຂົາທັງຫລາຍປາຖນາ.[25]ທ່ານຈຶ່ງປ່ອຍຄົນທີ່ເຂົາຂໍນັ້ນເຊິ່ງຕິດຄຸກຢູ່ດ້ວຍຂໍ້ຫາການຈະຣາຈົນແລະຂ້າຄົນ,
ແຕ່ໄດ້ມອບພຣະເຢຊູເຈົ້າໄວ້ຕາມໃຈຂອງພວກເຂົາ.
[26]ຂະນະທີ່ພວກເຂົາພາພຣະອົງອອກໄປ, ພວກເຂົາໄດ້ຈັບຊີໂມນໄທກີເຣເນທີ່ມາຈາກບ້ານນອກ
ແລ້ວເອົາໄມ້ກາງແຂນວາງເທິງບ່າເຂົາໃຫ້ແບກຕາມພຣະເຢຊູໄປ.
[27]ປະຊາຊົນຈຳນວນຫລວງຫລາຍແລະພວກແມ່ຍິງທີ່ຕີເອິກຮ້ອງໄຫ້ກັບພຣະອົງຕິດຕາມພຣະອົງໄປ.
[28]ແຕ່ພຣະເຢຊູເຈົ້າຊົງຫລຽວຫລັງມາກ່າວກັບພວກເຂົາວ່າ, "ລູກສາວແຫ່ງເຢຣູຊາເລັມເອີຍ, ຢ່າຊູ່ຮ້ອງໄຫ້ສົງສານເຮົາເລີຍ, ແຕ່ຈົ່ງຮ້ອງ-
ໄຫ້ສົງສານຕົນເອງແລະລູກໆ ຂອງທ່ານເຖີດ.
[29]ເບິ່ງແມ, ຈະມີວັນທີ່ພວກເຂົາຈະເວົ້າວ່າ, 'ພຣະພອນຈົ່ງມີແກ່ຍິງທີ່ເປັນຫມັນແລະທ້ອງທີ່ບໍ່ເກີດລູກ, ແລະຫົວນົມທີ່ລູກບໍ່ໄດ້ດູດຈັກເທື່ອ'.
[30]ແລ້ວພວກເຂົາຈະເລີ່ມເວົ້າກັບພູເຂົາວ່າ 'ຈົ່ງເຈື່ອນລົງມາທັບເຮົາ' ແລະກ່າວແກ່ໂນນວ່າ 'ຈົ່ງປົກຄຸມເຮົາໄວ້'.[31]ເພາະ-
ວ່າຖ້າເຂົາເຮັດສິ່ງເຫລົ່ານີ້ຂະນະທີ່ຕົ້ນໄມ້ຍັງຂຽວສົດຢູ່, ແລ້ວແມ່ນຫຍັງຈະເກີດຂຶ້ນຕອນທີ່ຕົ້ນໄມ້ຫ່ຽວແຫ້ງ?"
[32]ຍັງມີຊາຍອີກສອງຄົນທີ່ເປັນຜູ້ຮ້າຍ ຊຶ່ງຖືກລົງໂທດໃຫ້ເຖິງຄວາມຕາຍພ້ອມກັບພຣະອົງ.
[33]ເມື່ອພວກເຂົາມາເຖິງບ່ອນຫນຶ່ງທີ່ເອີ້ນວ່າ "ພູເຂົາກະໂຫລກຫົວ" ພວກເຂົາໄດ້ຄຶງພຣະ-
ອົງແລະຄຶງໂຈນຄົນຫນຶ່ງໄວ້ເບື້ອງຂວາແລະອີກຄົນຫນຶ່ງໄວ້ເບື້ອງຊ້າຍຂອງພຣະອົງ.[34]ພຣະເຢຊູກ່າວວ່າ, "ພຣະບິດາເຈົ້າ, ຂໍຊົງໂຜດຍົກ-
ໂທດໃຫ້ພວກເຂົາ, ເພາະວ່າພວກເຂົາບໍ່ຮູ້ຈັກວ່າພວກເຂົາກຳລັງເຮັດອັນໃດ" ແລະພວກເຂົາກໍຈົກສະຫລາກ ເພື່ອເອົາເຄື່ອງທົງຂອງພຣະ-
ອົງມາແບ່ງກັນ.
[35]ປະຊາຊົນພາກັນຢືນເບິ່ງຂະນະທີ່ພວກຜູ້ນຳຊາວຢິວກໍເຍາະເຍີ້ຍພຣະອົງວ່າ, "ເຂົາຊ່ອຍຄົນອື່ນໃຫ້ລອດພົ້ນໄດ້
ກໍຈົ່ງໃຫ້ເຂົາຊ່ອຍຕົນເອງໃຫ້ລອດເຖີດ ຖ້າເຂົາເປັນພຣະຄຣິດທີ່ພຣະເຈົ້າໄດ້ຊົງເລືອກໄວ້ນັ້ນ."
[36]ພວກທະຫານພາກັນເຍາະເຍີ້ຍພຣະອົງ ແລະເຂົ້າມາຫາພຣະອົງແລະເອົາເຫລົ້າອະງຸ່ນສົ້ມສົ່ງໃຫ້ພຣະອົງ.[37]ແລ້ວເວົ້າວ່າ, "ຖ້າທ່ານເປັນກະ-
ສັດຊາດຢິວ, ຈົ່ງຊ່ອຍຕົວເອງໃຫ້ພົ້ນເຖີດ."[38]ມີປ້າຍຕິດໄວ້ເທິງຫົວພຣະອົງວ່າ, "ນີ້ຄືກະສັດຂອງຊາດຢິວ."
[39]ໂຈນຄົນຫນຶ່ງທີ່ກຳລັງຖືກຄຶງນັ້ນເວົ້າໝິ່ນປະໝາດພຣະອົງວ່າ, "ທ່ານເປັນພຣະຄຣິດບໍ່ແມ່ນບໍ?
ຈົ່ງຊ່ອຍຕົວທ່ານເອງແລະຊ່ອຍເຮົາໃຫ້ພົ້ນເຖີດ."[40]ແຕ່ໂຈນອີກຄົນຫນຶ່ງໄດ້ຫ້າມວ່າ, "ເຈົ້າບໍ່ຢ້ານກົວພຣະເຈົ້າບໍ ເຈົ້າກໍຖືກລົງໂທດເຫມືອນກັນ?
[41]ອັນທີ່ຈິງເຮົາກໍສົມຄວນໄດ້ຮັບໂທດຕາມການກະທຳຂອງເຮົາແລ້ວ, ແຕ່ຊາຍຄົນນີ້ບໍ່ໄດ້ເຮັດຜິດອັນໃດ."


generated on Tue Jun 17 19:01:42 2025

[42]ເຂົາກ່າວຕໍ່ໄປອີກ, “ພຣະເຢຊູເຈົ້າ, ຂໍໂຜດຣະ-
ນຶກຈື່ຈຳເຖິງຂ້ານ້ອຍເມື່ອພຣະອົງສະເດັດເຂົ້າສູ່ອານາຈັກຂອງພຣະອົງດ້ວຍເຖີດ.”[43]ພຣະເຢຊູເຈົ້າຕອບລາວວ່າ,
“ເຮົາບອກຄວາມຈິງແກ່ທ່ານວ່າ, ວັນນີ້ເຈົ້າຈະຢູ່ກັບເຮົາໃນທີ່ສຸຂະເສີມ.”
[44]ເວລານັ້ນປະມານທ່ຽງວັນ ຄວາມມືດປົກຄຸມທົ່ວແຜ່ນດິນຈົນເຖິງບ່າຍສາມໂມງ.[45]ເມື່ອແສງຕາເວັນມືດໄປ, ຜ້າກັ້ງໃນພຣະວິ-
ຫານກໍຖືກຈີກອອກເປັນສອງຕ່ອນ.
[46]ພຣະເຢຊູເຈົ້າຊົງຮ້ອງສຽງດັງວ່າ, “ພຣະບິດາເຈົ້າເອີຍ, ລູກຂໍມອບຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ”
ຫລັງຈາກກ່າວຢ່າງນັ້ນແລ້ວພຣະອົງກໍສິ້ນພຣະຊົນ.[47]ເມື່ອນາຍຮ້ອຍໄດ້ເຫັນສິ່ງທີ່ເກີດຂຶ້ນ, ເພິ່ນຈຶ່ງສັນຣະເສີນພຣະເຈົ້າວ່າ,
“ນີ້ເປັນຜູ້ທີ່ຊອບທັມທີ່ແທ້ຈິງ.”
[48]ເມື່ອຄົນທັງປວງທີ່ມາຊຸມນຸມກັນເພື່ອເປັນພະຍານສິ່ງທີ່ເກີດຂຶ້ນ ຜູ້ທີ່ໄດ້ເຫັນສິ່ງທີ່ເກີດຂຶ້ນກັບຕາ, ກໍພາກັນຕີເອິກດ້ວຍຄວາມທຸກກັບໄປ.
[49]ແຕ່ທຸກຄົນທີ່ຮູ້ຈັກພຣະອົງ ແລະພວກແມ່ຍິງທີ່ໄດ້ຕິດຕາມພຣະອົງຈາກແຂວງຄາລີເລຢືນເບິ່ງສິ່ງເຫລົ່ານີ້ແຕ່ໄກ.
[50]ເບິ່ງແມ, ມີຊາຍຄົນຫນຶ່ງຊື່ໂຢເຊັບ ເປັນສະມາຊິກສະພາ, ທ່ານເປັນຄົນດີແລະຊອບທັມ.
[51]ທ່ານຜູ້ນີ້ບໍ່ໄດ້ເຫັນດີກັບການຕັດສິນໃຈແລະການກະທຳຂອງພວກເຂົາ. ທ່ານມາຈາກອາຣີມາທາຍ ຊຶ່ງເປັນເມືອງຫນຶ່ງຂອງຄົນຍິວ,
ທ່ານເປັນຜູ້ຄອຍຖ້າຣາຊະອານາຈັກຂອງພຣະເຈົ້າ.
[52]ທ່ານຜູ້ນີ້ໄດ້ເຂົ້າໄປຫາປີລາດເພື່ອຂໍພຣະສົບພຣະເຢຊູເຈົ້າ.[53]ເພິ່ນນຳພຣະສົບຂອງພຣະອົງລົງມາແລະຫໍ່ຫຸ້ມດ້ວຍຜ້າລີນິນ
ແລະວາງພຣະອົງໄວ້ໃນອຸບໂມງທີ່ສະກັດໄວ້ໃນຫີນ ແລະຍັງບໍ່ເຄີຍວາງສົບຜູ້ໃດມາກ່ອນ.
[54]ວັນນັ້ນເປັນວັນຈັດຕຽມ ແລະໃກ້ເຖິງວັນສະບາໂຕ.[55]ພວກແມ່ຍິງທີ່ຕິດຕາມພຣະອົງຈາກແຂວງຄາລີເລໄດ້ຕາມໄປ,
ແລະໄດ້ເຫັນອຸບໂມງແລະເຫັນວ່າພຣະສົບຂອງພຣະອົງວາງໄວ້ໃນທີ່ນັ້ນຢ່າງໃດ.[56]ພວກນາງຈຶ່ງໄດ້ກັບໄປແລະຈັດຕຽມເຄື່ອງເທດແລະນ້ຳ-
ມັນຫອມ, ແລະໃນວັນສະບາໂຕ ພວກເຂົາກໍເຊົາພັກຕາມພຣະບັນຍັດ.

 generated on Tue Jun 17 19:01:42 2025

24 [1]ຮຸ່ງເຊົ້າຂອງວັນຕົ້ນສັບປະດາ (ວັນອາທິດ) ພວກຜູ້ຍິງນຳເອົາເຄື່ອງຫອມທີ່ໄດ້ຕຽມໄວ້ມາທີ່ອຸບໂມງຝັງສົບ.
[2]ພວກເຂົາພົບກ້ອນຫີນຖືກກິ້ງອອກຈາກອຸບໂມງ.[3]ພວກເຂົາເຂົ້າໄປທາງໃນແຕ່ບໍ່ເຫັນພຣະສົບຂອງພຣະເຢຊູອົງພຣະຜູ້ເປັນເຈົ້າ.

[4]ຕໍ່ມາຂະນະທີ່ພວກເຂົາກຳລັງສັບສົນໃນເລື່ອງນີ້ ທັນໃດນັ້ນກໍມີຊາຍສອງຄົນນຸ່ງເຄື່ອງອັນງົດງາມຈົນເຫລື້ອມຕາ ຢືນຢູ່ໃກ້ພວກເຂົາ.
[5]ຂະນະທີ່ແມ່ຍິງເຫລົ່ານັ້ນຕ່າງກໍຢ້ານກົວແລະກົ້ມຫນ້າລົງພື້ນດິນ, ຊາຍສອງຄົນນັ້ນຈຶ່ງເວົ້າກັບພວກເຂົາວ່າ,
"ເປັນຫຍັງພວກທ່ານຈຶ່ງຊອກຫາຄົນເປັນໃນຫມູ່ຄົນຕາຍ?
[6]ພຣະອົງບໍ່ຢູ່ທີ່ນີ້ ແຕ່ໄດ້ເປັນຂຶ້ນຈາກຄວາມຕາຍແລ້ວ, ຈົ່ງຣະນຶກເຖິງສິ່ງທີ່ພຣະອົງຊົງກ່າວກັບທ່ານທັງໃນຂະນະທີ່ພຣະອົງຍັງຢູ່ທີ່ແຂວງຄາລີເລ.
[7]ທີ່ກ່າວວ່າ ບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຂອງພວກຄົນບາບ, ແລະຕ້ອງຖືກຄຶງໄວ້ທີ່ໄມ້ກາງແຂນ,
ແລ້ວໃນວັນທີ່ສາມຈະເປັນຄືນມາໃຫມ່ອີກຄັ້ງ."
[8]ແມ່ຍິງເຫລົ່ານັ້ນຈຶ່ງຣະນຶກເຖິງຖ້ອຍຄຳຂອງພຣະອົງ.
[9]ຈຶ່ງອອກຈາກອຸບໂມງຝັງສົບໄປບອກສິ່ງເຫລົ່ານີ້ໃຫ້ກັບພວກສາວົກສິບເອັດຄົນແລະຄົນອື່ນທີ່ເຫລືອທັງຫມົດ.
[10]ຜູ້ທີ່ນຳສິ່ງເຫລົ່ານີ້ມາລາຍງານແກ່ພວກອັກຄະສາວົກ ຄື ມາຣີ ໄທມັກດາລາ, ໂຢຮັນນາ, ມາຣີແມ່ຂອງຢາໂກໂບ, ແລະແມ່ຍິງຄົນອື່ນໆທີ່-
ຢູ່ກັບເຂົາ.
[11]ແຕ່ຂ່າວສານນີ້ ເບິ່ງຄືເປັນຄຳເວົ້າທີ່ໄຮ້ສາຣະຕໍ່ພວກອັກຄະສາວົກ, ພວກເຂົາບໍ່ເຊື່ອຄຳເວົ້າຂອງພວກຍິງເຫລົ່ານັ້ນ.[12]ແຕ່ເປໂຕລຸກ-
ຂຶ້ນແລະແລ່ນໄປທີ່ອຸບໂມງຝັງສົບ, ເຂົາກົ້ມລົງແລະເບິ່ງເຂົ້າໄປທາງໃນ, ເຂົາເຫັນແຕ່ຜ້າລີນິນວາງຢູ່, ເປໂຕຈຶ່ງກັບໄປບ້ານຂອງຕົນ ແລະຄຶດປະ-
ຫລາດໃຈກັບສິ່ງທີ່ໄດ້ເກີດຂຶ້ນ.
[13]ເບິ່ງແມ, ໃນວັນນັ້ນມີສາວົກສອງຄົນກຳລັງເດີນທາງໄປທີ່ບ້ານແຫ່ງຫນຶ່ງຊື່ວ່າ ເອມາອູດ, ຊຶ່ງຢູ່ຫ່າງໄກຈາກເຢຣູຊາ-
ເລັມປະມານສິບເອັດກິໂລແມັດ.[14]ພວກເຂົາໄດ້ສົນທະນາກັນເຖິງເຫດການທີ່ເກີດຂຶ້ນ.
[15]ຕໍ່ມາໃນຂະນະທີ່ພວກເຂົາກຳລັງສົນທະນາກັນແລະສົງໃສກັນຢູ່ນັ້ນ, ພຣະເຢຊູເຈົ້າສະເດັດມາໃກ້ແລະຮ່ວມເດີນທາງໄປກັບພວກເຂົາ.
[16]ແຕ່ສາຍຕາຂອງພວກເຂົາຖືກປິດບັງເອົາໄວ້ ຈຶ່ງຈື່ພຣະອົງບໍ່ໄດ້.
[17]ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ, "ພວກທ່ານທັງສອງສົນທະນາກັນເຖິງເລື່ອງອັນໃດຂະນະທີ່ເດີນມານີ້?" ພວກເຂົາຢືນຢູ່ທີ່ນັ້ນຫນ້າຕາໂສກ-
ເສົ້າ.[18]ຄົນຫນຶ່ງທີ່ຊື່ວ່າ ກະໂລປາ ຈຶ່ງຕອບພຣະອົງວ່າ, "ທ່ານຄືຄົນດຽວໃນເຢຣູຊາເລັມທີ່ບໍ່ຮູ້ວ່າມີເລື່ອງອັນໃດເກີດຂຶ້ນທີ່ນັ້ນໃນສາມວັນນີ້ບໍ?"
[19]ພຣະເຢຊູເຈົ້າຕອບພວກເຂົາວ່າ, "ເລື່ອງອັນໃດບໍ?" ພວກເຂົາຕອບພຣະອົງວ່າ, "ເລື່ອງພຣະເຢຊູໄທນາຊາເຣັດ ຜູ້ເປັນຜູ້ປະກາດພຣະທັມ
ຜູ້ເຕັມໄປດ້ວຍຣິດອຳນາດ, ທັງໃນການກະທຳແລະຄຳເວົ້າຕໍ່ພຣະພັກພຣະເຈົ້າແລະຕໍ່ຫນ້າຄົນທັງປວງ.[20]ແລະພວກຫົວຫນ້າປະໂລຫິດ
ກັບພວກຜູ້ມີອຳນາດປົກຄອງໄດ້ມອບເພິ່ນໄວ້ແກ່ການລົງໂທດເຖິງຄວາມຕາຍ ແລະໄດ້ຄຶງເພິ່ນໄວ້ທີ່ໄມ້ກາງແຂນ.
[21]ແຕ່ເຮົາຫວັງວ່າ ພຣະອົງຈະເປັນຜູ້ທີ່ຊ່ວຍກູ້ອິສະຣາເອນໃຫ້ເປັນອິສຣະ, ຫລາຍກວ່ານັ້ນອີກ, ນີ້ກໍຜ່ານໄປສາມວັນແລ້ວ ນັບຕັ້ງ-
ແຕ່ເຫດການເຫລົ່ານັ້ນເກີດຂຶ້ນ.
[22]ແຕ່ພວກແມ່ຍິງລາງຄົນທີ່ຢູ່ກັບພວກເຮົາຍັງເຮັດໃຫ້ພວກເຮົາປະຫລາດໃຈ ເມື່ອພວກນາງໄດ້ໄປທີ່ອຸບໂມງຝັງສົບໃນຕອນຮຸ່ງເຊົ້າ.
[23]ຄືພວກນາງບໍ່ໄດ້ເຫັນພຣະສົບຂອງພຣະອົງ, ພວກນາງຈຶ່ງມາບອກວ່າໄດ້ເຫັນນິມິດຂອງເຫລົ່າທູດສະຫວັນທີ່ເວົ້າວ່າພຣະອົງມີຊີວິດຢູ່.
[24]ຜູ້ຊາຍບາງຄົນທີ່ຢູ່ກັບພວກເຮົາໄດ້ໄປທີ່ອຸບໂມງແລະໄດ້ພົບເຫັນຕາມສິ່ງທີ່ພວກແມ່ຍິງໄດ້ບອກໄວ້, ແຕ່ພວກເຂົາບໍ່ເຫັນພຣະອົງ."
[25]ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ, "ໂອ, ພວກຄົນໂງ່ເອີຍ, ພວກທ່ານມີໃຈເສີຍຊ້າທີ່ຈະເຊື່ອທຸກສິ່ງທີ່ພວກຜູ້ປະກາດພຣະທັມໄດ້ກ່າວໄວ້.
[26]ພຣະຄຣິດເຈົ້າຈຳເປັນຕ້ອງທົນທຸກຕໍ່ສິ່ງເຫລົ່ານີ້ແລະເຂົ້າສູ່ພຣະສະຫງ່າຣາສີຂອງພຣະອົງບໍ່ແມ່ນບໍ?"[27]ເລີ່ມຕົ້ນຈາກໂມເຊຈົນມາຮອດບັນ-
ດາຜູ້ປະກາດພຣະທັມທຸກຄົນ, ພຣະເຢຊູເຈົ້າໄດ້ອະທິບາຍຄວາມຫມາຍຂອງພຣະຄັມພີທຸກຂໍ້ ເຖິງສິ່ງຕ່າງໆ ທີ່ກ່ຽວຂ້ອງກັບພຣະ-
ອົງເອງໃຫ້ແກ່ພວກເຂົາ.
[28]ເມື່ອພວກເຂົາໃກ້ຮອດບ້ານທີ່ພວກເຂົາກຳລັງເດີນທາງໄປນັ້ນ ພຣະເຢຊູເຈົ້າເຮັດເຫມືອນກັບວ່າຈະເດີນທາງຕໍ່ໄປ.
[29]ແຕ່ພວກເພິ່ນທັງສອງຫນ່ວງຫນ່ຽວພຣະອົງວ່າ, "ຂໍພັກເຊົາຢູ່ກັບພວກເຮົາຕໍ່ເຖີດ ຕອນນີ້ໃກ້ຈະຄ່ຳແລ້ວແລະວັນກໍກຳລັງຈະຫມົດໄປ."
ດັ່ງນັ້ນພຣະເຢຊູເຈົ້າຈຶ່ງເຂົ້າໄປທາງໃນແລະພັກຢູ່ກັບພວກເພິ່ນ.
[30]ຕໍ່ມາເມື່ອພຣະອົງກຳລັງນັ່ງໂຕະຮ່ວມຮັບປະທານອາຫານຢູ່ກັບພວກເພິ່ນ, ພຣະອົງຈັບເອົາເຂົ້າຈີ່ຂຶ້ນມາ ໂມທະນາຂອບພຣະຄຸນ
ແລ້ວຊົງຫັກຍື່ນໃຫ້ພວກເພິ່ນ.[31]ດັ່ງນັ້ນຕາຂອງພວກເພິ່ນຈຶ່ງເປີດອອກພວກເພິ່ນຮູ້ຈັກພຣະອົງແລະພຣະ-
ອົງຈຶ່ງຫາຍໄປຈາກສາຍຕາຂອງພວກເພິ່ນ.[32]ພວກເພິ່ນເວົ້າຕໍ່ກັນວ່າ, "ຫົວໃຈຂອງເຮົາກໍຮ້ອນຮົນຢູ່ພາຍໃນບໍ່ແມ່ນບໍ?, ເມື່ອພຣະ-
ອົງຊົງເວົ້ານຳເຮົາຕາມທາງ ຂະນະທີ່ພຣະອົງອະທິບາຍພຣະຄັມພີໃຫ້ກັບພວກເຮົາຟັງນັ້ນ?"
[33]ພວກເຂົາຈຶ່ງລຸກຂຶ້ນໃນເວລານັ້ນແລ້ວກັບໄປຍັງເຢຣູຊາເລັມ.
ພວກເຂົາໄດ້ພົບສາວົກສິບເອັດຄົນນັ້ນຊຸມນຸມກັນຢູ່ພ້ອມກັບຄົນເຫລົ່ານັ້ນທີ່ຢູ່ກັບພວກເຂົາ.[34]ສາວົກທັງສອງຄົນເວົ້າວ່າ, "ອົງພຣະຜູ້ເປັນເຈົ້າ
ເປັນຄືນມາຈາກຄວາມຕາຍແລ້ວແນ່ແທ້, ແລະໄດ້ປະກົດແກ່ຊີໂມນ."[35]ດັ່ງນັ້ນພວກເຂົາທັງສອງຈຶ່ງເລົ່າເຖິງສິ່ງຕ່າງໆ
ທີ່ເກີດຂຶ້ນຕາມທາງແລະເຖິງວິທີ ທີ່ພຣະເຢຊູເຈົ້າສະແດງແກ່ພວກເຂົາດ້ວຍການຫັກເຂົ້າຈີ່.
[36]ໃນຂະນະທີ່ພວກເຂົາເລົ່າເຖິງສິ່ງເຫລົ່ານີ້, ພຣະເຢຊູເຈົ້າໄດ້ຢືນຢູ່ທ່າມກາງພວກເພິ່ນ, ແລະໄດ້ກ່າວກັບພວກເພິ່ນວ່າ, "ສັນ-
ຕິສຸກຈົ່ງດຳຣົງຢູ່ກັບທ່ານທັງຫລາຍເຖີດ."[37]ແຕ່ພວກເຂົາກໍຢ້ານ ສະດຸ້ງຕົກໃຈ ແລະ ຄິດວ່າພວກເຂົາເຫັນວິນຍານ.
[38]"ເປັນຫຍັງພວກທ່ານຈຶ່ງເດືອດຮ້ອນໃຈຂະນາດນີ້? ເປັນຫຍັງຈຶ່ງປ່ອຍໃຫ້ຄວາມສົງໃສເກີດຂຶ້ນໃນຫົວໃຈ?[39]ຈົ່ງເບິ່ງມືແລະຕີນຂອງເຮົາດູ.
ນີ້ແມ່ນເຮົາເອງ, ຈົ່ງຈັບຕົວເຮົາແລະເບິ່ງ, ເພາະວ່າຜີບໍ່ມີເນື້ອແລະກະ-
ດູກຢ່າງທີ່ພວກທ່ານເຫັນວ່າເຮົາມີຢູ່ນີ້."[40]ເມື່ອພຣະອົງກ່າວສິ່ງນີ້ພຣະອົງສະແດງໃຫ້ພວກເຂົາເຫັນມືແລະຕີນຂອງພຣະອົງ.
[41]ໃນຂະນະທີ່ພວກເຂົາມີຄວາມຍິນດີແຕ່ກໍຍັງສົງໃສແລະຍັງບໍ່ວາງໃຈເຊື່ອ. ພຣະເຢຊູເຈົ້າຈຶ່ງຖາມເຂົາວ່າ,
"ພວກທ່ານມີຫຍັງໃຫ້ກິນແດ່?"[42]ພວກເຂົາກໍເອົາປາປີ້ງຕ່ອນຫນຶ່ງມາໃຫ້ພຣະອົງ.[43]ພຣະອົງຮັບມາແລະກິນຢູ່ຕໍ່ຫນ້າພວກເພິ່ນ


generated on Tue Jun 17 19:01:42 2025

44ພຣະອົງກ່າວແກ່ພວກເຂົາວ່າ, “ ເມື່ອເຮົາຍັງຢູ່ກັບພວກທ່ານ ເຮົາບອກພວກທ່ານແລ້ວເຖິງທຸກສິ່ງທີ່ຖືກບັນທຶກໄວ້ໃນບັນຍັດຂອງໂມເຊ,
ໃນຫນັງສືຂອງພວກຜູ້ປະກາດພຣະທັມ, ແລະໃນຫນັງສືເພງສັນຣະເສີນຈະຕ້ອງສຳເລັດ.”
45ແລ້ວພຣະອົງຈຶ່ງເປີດໃຈຂອງພວກເພິ່ນ ເພື່ອພວກເພິ່ນຈະເຂົ້າໃຈພຣະຄັມພີ.46ພຣະອົງກ່າວແກ່ເພິ່ນວ່າ, “ນີ້ຄືສິ່ງທີ່ຂຽນໄວ້ ຄືພຣະ-
ຄຣິດເຈົ້າຈະຕ້ອງທົນທຸກທໍຣະມານແລະເປັນຄືນມາອີກຄັ້ງຈາກຕາຍໃນວັນທີສາມ.47ແລະເລື່ອງການຖິ້ມໃຈເກົ່າເອົາ-
ໃຈໃຫມ່ກັບການໃຫ້ອະພັຍຄວາມຜິດບາບ ຈຳຕ້ອງປະກາດອອກໄປໃນພຣະນາມຂອງພຣະອົງໃຫ້ໄປເຖິງທຸກຊົນຊາດໂດຍເລີ່ມຕົ້ນແຕ່ກຸງເຢ-
ຣູຊາເລັມ.
48ພວກທ່ານເປັນພະຍານເຖິງສິ່ງເຫລົ່ານີ້.49ເບິ່ງແມ, ເຮົາຈະປະທານສິ່ງທີ່ພຣະບິດາເຈົ້າຊົງສັນຍາໃຫ້ແກ່ພວກທ່ານ
ແຕ່ຈົ່ງລໍຄອຍຢູ່ໃນເມືອງຈົນກວ່າພວກທ່ານຈະໄດ້ຮັບຣິດອຳນາດມາຈາກເບື້ອງເທິງ.”
50ແລ້ວພຣະເຢຊູເຈົ້າຈຶ່ງນຳພວກເຂົາອອກໄປໃກ້ຈະເຖິງບ້ານເບັດທານີ. ພຣະອົງຊົງຍົກພຣະຫັດຂອງພຣະອົງຂຶ້ນແລະອວຍພອນພວກເພິ່ນ.
51ຕໍ່ມາໃນຂະນະທີ່ພຣະອົງກຳລັງອວຍພອນພວກເພິ່ນ, ພຣະອົງໄດ້ສະເດັດຈາກພວກເພິ່ນໄປແລະຊົງຖືກຮັບຂຶ້ນໄປສູ່ສະຫວັນ.
52ດັ່ງນັ້ນພວກເພິ່ນຈຶ່ງນະມັດສະການພຣະອົງ ແລະກັບໄປຍັງນະຄອນເຢຣູຊາເລັມດ້ວຍຄວາມຊື່ນຊົມຍິນດີຢ່າງໃຫຍ່ຫລວງ.
53ພວກເພິ່ນຢູ່ໃນພຣະວິຫານເປັນປະຈຳ ເພື່ອສັນຣະເສີນພຣະເຈົ້າ.

# ໂຢຮັນ

1 1ພຣະທັມຊົງດຳຣົງນັບຕັ້ງແຕ່ຕົ້ນເດີມ, ແລະພຣະທັມຊົງຢູ່ກັບພຣະເຈົ້າ, ພຣະທັມຊົງເປັນພຣະເຈົ້າ.
2ພຣະທັມນີ້ດຳຣົງມາຕັ້ງແຕ່ເລີ່ມຕົ້ນກັບພຣະເຈົ້າ.3ທຸກສິ່ງຖືກສ້າງຂຶ້ນໂດຍພຣະອົງ, ແລະຖ້າບໍ່ມີພຣະອົງ ກໍບໍ່ມີຈັກສິ່ງທີ່ຖືກສ້າງຂຶ້ນໄວ້.

4ມີຊີວິດທີ່ຢູ່ໃນພຣະອົງ, ຊຶ່ງຊີວິດນັ້ນເປັນຄວາມສະຫວ່າງຂອງມະນຸດທຸກຄົນ.5ຄວາມສະຫວ່າງສ່ອງເຂົ້າມາໃນຄວາມມືດ,
ແລະຄວາມມືດນັ້ນບໍ່ເອົາຊະນະຄວາມສະຫວ່າງໄດ້.
6ຍັງມີຊາຍຄົນຫນຶ່ງທີ່ພຣະເຈົ້າໄດ້ສົ່ງມາ, ຊາຍຄົນນີ້ຊື່ວ່າໂຢຮັນ.7ທ່ານມາເພື່ອຈະເປັນພະຍານເຖິງຄວາມສະຫວ່າງນັ້ນ,
ເພື່ອທີ່ທຸກຄົນຈະໄດ້ເຊື່ອຜ່ານທ່ານ.8ໂຢຮັນບໍ່ແມ່ນຄວາມສະຫວ່າງນັ້ນ, ແຕ່ທ່ານມາເພື່ອເປັນພະຍານເຖິງຄວາມສະຫວ່າງນັ້ນ.
9ຄືຄວາມສະຫວ່າງທີ່ແທ້ຈິງ ທີ່ໃຫ້ຄວາມສະຫວ່າງແກ່ມະນຸດທັງປວງ ເຊິ່ງໄດ້ເຂົ້າມາໃນໂລກນີ້.
10ພຣະອົງຊົງຢູ່ໃນໂລກ, ໂລກນີ້ຖືກສ້າງຂຶ້ນຜ່ານທາງພຣະອົງນັ້ນ, ແຕ່ໂລກນີ້ພັດບໍ່ໄດ້ຮູ້ຈັກພຣະອົງ.11ພຣະອົງເຂົ້າມາເພື່ອຊົນຊາດຂອງພຣະອົງ,
ແຕ່ຊົນຊາດຂອງພຣະອົງບໍ່ຍອມຮັບພຣະອົງ.
12ແຕ່ຄົນຫລວງຫລາຍທີ່ຕ້ອນຮັບພຣະອົງ, ຄົນທີ່ເຊື່ອໃນພຣະນາມຂອງພຣະອົງ, ພຣະອົງຈະໃຫ້ຄົນນັ້ນໄດ້ສິດເປັນບຸດຂອງພຣະເຈົ້າ.
13ບໍ່ແມ່ນໂດຍທາງສາຍເລືອດ, ຫລືໂດຍຄວາມຕ້ອງການຂອງມະນຸດ, ແຕ່ເປັນໂດຍພຣະເຈົ້າ.
14ພຣະທັມຊົງເກີດເປັນມະນຸດແລະຢູ່ທ່າມກາງພວກເຮົາ. ເຮົາໄດ້ເຫັນສະຫງ່າຣາສີຂອງພຣະອົງ, ເປັນສະຫງ່າຣາ-
ສີແບບດຽວກັນຊຶ່ງມາຈາກພຣະບິດາຜູ້ດຽວເທົ່ານັ້ນ, ທີ່ເຕັມດ້ວຍພຣະຄຸນແລະຄວາມຈິງ.15ໂຢຮັນໄດ້ເປັນພະ-
ຍານເຖິງພຣະອົງແລະຮ້ອງສຽງດັງວ່າ, “ທ່ານຜູ້ນີ້ຄືຄົນທີ່ເຮົາໄດ້ບອກແກ່ທ່ານວ່າ ‘ທ່ານຜູ້ທີ່ສະເດັດມາພາຍຫລັງເຮົາ ເປັນໃຫຍ່ກວ່າເຮົາ,
ເພາະທ່ານເປັນຢູ່ກ່ອນເຮົາ’.”
16ເພາະວ່າໂດຍຄວາມຄົບບໍຣິບູນຂອງພຣະອົງເຮັດໃຫ້ເຮົາທັງຫລາຍໄດ້ຮັບພຣະຄຸນຊ້ອນພຣະຄຸນ.17ເພາະບັນຍັດເຫລົ່ານັ້ນທີ່ໄດ້ຊົງປຣະ-
ທານຜ່ານທາງໂມເຊ. ສ່ວນພຣະຄຸນແລະຄວາມຈິງມາທາງພຣະເຢຊູຄຣິດ.18ບໍ່ເຄີຍມີໃຜເຫັນພຣະເຈົ້າເລີຍ. ພຣະອົງດຽວທີ່ຊົງເປັນພຣະເຈົ້າ,
ຜູ້ປຣະທັບໃນເອິກຂອງພຣະບິດາ, ໄດ້ສະແດງໃຫ້ພຣະເຈົ້າເປັນທີ່ຮູ້ຈັກ.
19ນີ້ເປັນຄຳພະຍານຂອງໂຢຮັນ ເມື່ອພວກຢິວຈາກນະຄອນເຢຣູຊາເລັມໄດ້ສົ່ງພວກປະໂລຫິດແລະພວກຄົນເລວີໄປຖາມທ່ານວ່າ,
“ທ່ານເປັນໃຜ?”20ທ່ານຍອມຮັບ, ບໍ່ໄດ້ປະຕິເສດແຕ່ຕອບວ່າ, “ຂ້າພຣະເຈົ້າບໍ່ແມ່ນພຣະຄຣິດ.”21ພວກເຂົາຈຶ່ງຖາມທ່ານອີກວ່າ,
“ແລ້ວທ່ານເປັນໃຜ? ທ່ານແມ່ນເອລີຢາແມ່ນບໍ?” ທ່ານຕອບວ່າ, “ຂ້າພຣະເຈົ້າບໍ່ແມ່ນຜູ້ນັ້ນ.” ພວກເຂົາຖາມວ່າ, “ທ່ານຄືຜູ້ປະກາດພຣະ-
ທັມແມ່ນບໍ?” ທ່ານຕອບວ່າ, “ບໍ່ແມ່ນ.”
22ແລ້ວພວກເຂົາກໍຖາມທ່ານອີກວ່າ, “ແລ້ວທ່ານເປັນໃຜ, ເພື່ອພວກເຮົາຈະໄດ້ເອົາຄຳຕອບນັ້ນໄປບອກຄົນແກ່ຄົນສົ່ງເຮົາມາ?
ແລ້ວທ່ານຈະບອກວ່າທ່ານເປັນໃຜ?”23ທ່ານຕອບວ່າ, “ຂ້າພຣະເຈົ້າເປັນສຽງຮ້ອງ ປ່າວປະກາດໃນປ່າວ່າ: ‘ຈົ່ງເຮັດຫົນທາງຂອງອົງພຣະຜູ້ເປັນ-
ເຈົ້າໃຫ້ຊື່ໄປ,’ ເຫມືອນກັບທີ່ຜູ້ປະກາດພຣະທັມ ເອຊາຢາ ໄດ້ບອກໄວ້.
24ບັດນີ້ຄົນເຫລົ່ານັ້ນທີ່ພວກຟາຣີຊາຍສົ່ງໄປ.25ພວກເຂົາຖາມທ່ານວ່າ, “ເປັນຫຍັງທ່ານຈຶ່ງໃຫ້ຮັບບັບຕິສະມາ ໃນເມື່ອທ່ານເອງກໍບໍ່ແມ່ນພຣະ-
ຄຣິດ ຫລື ເອລີຢາ ຫລືຜູ້ປະກາດພຣະທັມນັ້ນ?”
26ໂຢຮັນຕອບພວກເຂົາວ່າ, “ເຮົາໃຫ້ຮັບບັບຕິສະມາດ້ວຍນ້ຳ. ແຕ່ໃນທ່າມກາງພວກທ່ານມີຜູ້ໜຶ່ງຊຶ່ງທ່ານບໍ່ຮູ້ຈັກ.27ທ່ານທີ່ມາພາຍ-
ຫລັງຂ້າພະເຈົ້ານັ້ນ, ຂ້າພະເຈົ້າບໍ່ສົມຄວນແມ້ນແຕ່ຈະແກ້ສາຍຮັດເກີບຂອງຜູ້ນັ້ນ.”28ສິ່ງເຫລົ່ານີ້ເກີດຂຶ້ນເມື່ອໂຢຮັນກຳລັງໃຫ້ຮັບບັບຕິສະ-
ມາຢູ່ທີ່ບ້ານເບັດທານີ, ອີກຟາກຫນຶ່ງຂອງແມ່ນ້ຳຢໍແດນ.
29ວັນຕໍ່ມາ ໂຢຮັນເຫັນພຣະເຢຊູກຳລັງມາຫາທ່ານແລະທ່ານບອກວ່າ, “ເບິ່ງແມ, ພຣະເມສານ້ອຍຂອງພຣະເຈົ້າ
ຜູ້ທີ່ຈະມາເອົາຄວາມຜິດບາບຂອງໂລກນີ້ອອກໄປ!30ນີ້ຄືທ່ານທີ່ຂ້າພຣະເຈົ້າກ່າວເຖິງວ່າ
'ທ່ານທີ່ຈະມາພາຍຫລັງຂ້າພຣະເຈົ້າຊົງເປັນໃຫຍ່ກວ່າຂ້າພຣະເຈົ້າ, ເພາະພຣະອົງຊົງເປັນຢູ່ກ່ອນຂ້າພຣະເຈົ້າ.'31ຂ້າພຣະເຈົ້າບໍ່ຮູ້ຈັກທ່ານຜູ້ນີ້,
ແຕ່ເພື່ອທ່ານຈະໄດ້ຖືກປະກົດແຈ້ງແກ່ຄົນອິສຣາເອນ ທີ່ຂ້າພຣະເຈົ້າໄດ້ມາໃຫ້ຮັບບັບຕິສະມາໃນນ້ຳ.”
32ໂຢຮັນເປັນພະຍານວ່າ, “ຂ້າພຣະເຈົ້າໄດ້ເຫັນພຣະວິນຍານລັກສະນະເຫມືອນດັ່ງນົກເຂົາ ລົງມາຈາກຟ້າສະຫວັນ, ສະຖິດຢູ່ເທິງທ່ານ.
33ຂ້າພຣະເຈົ້າບໍ່ຮູ້ຈັກທ່ານ, ແຕ່ທ່ານທີ່ໄດ້ສົ່ງຂ້າພຣະເຈົ້າມາເພື່ອໃຫ້ບັບຕິສະມາດ້ວຍນ້ຳນັ້ນ ບອກຂ້າພຣະເຈົ້າວ່າ, 'ເຈົ້າຈະເຫັນພຣະວິນ-

ຍານເປັນເຫມືອນນົກເຂົາລົງມາສະຖິດຢູ່ເຫນືອທ່ານຜູ້ນັ້ນ, ທ່ານນັ້ນຄືຜູ້ທີ່ຈະໃຫ້ບັບຕິສະມາດ້ວຍພຣະວິນຍານບໍຣິ-
ສຸດ.'[34]ຂ້າພຣະເຈົ້າໄດ້ເຫັນແລະເປັນພະຍານວ່າ ທ່ານຜູ້ນັ້ນເປັນພຣະບຸດຂອງພຣະເຈົ້າ."
[35]ອີກຄັ້ງຫນຶ່ງ, ໃນວັນຕໍ່ມາ, ໃນຂະນະທີ່ໂຢຮັນກຳລັງຢືນຢູ່ກັບສາວົກຂອງທ່ານສອງຄົນ.[36]ພວກເຂົາເຫັນພຣະເຢຊູກຳລັງສະເດັດກາຍໄປ
ແລະທ່ານຈຶ່ງກ່າວວ່າ, "ເບິ່ງແມ, ພຣະເມສານ້ອຍຂອງພຣະເຈົ້າ!"
[37]ເມື່ອສາວົກສອງຄົນຂອງທ່ານໄດ້ຍິນທ່ານເວົ້າເຊັ່ນນັ້ນ ພວກເຂົາຈຶ່ງຕາມພຣະເຢຊູໄປ.[38]ເມື່ອພຣະເຢຊູຫັນກັບມາແລະເຫັນພວກເຂົາກຳລັງຕິດ-
ຕາມພຣະອົງ ຈຶ່ງເວົ້າກັບພວກເຂົາວ່າ, "ພວກທ່ານຕ້ອງການສິ່ງໃດ?" ພວກເຂົາຕອບວ່າ, "ຣັບບີ (ແປຄວາມໝາຍວ່າ ອາຈານ)
ທ່ານພັກຢູ່ທີ່ໃດ?"[39]ພຣະອົງຈຶ່ງບອກພວກເຂົາວ່າ, "ຈົ່ງມາແລະເບິ່ງເອງເຖີດ" ເມື່ອພວກເຂົາຕາມພຣະອົງໄປແລະໄດ້ເຫັນບ່ອນຊຶ່ງພຣະ-
ອົງຊົງພັກຢູ່, ພວກເຂົາຈຶ່ງຢູ່ກັບພຣະອົງໃນວັນນັ້ນ, ຕອນນັ້ນເປັນເວລາສີ່ໂມງແລງ.
[40]ຫນຶ່ງໃນສາວົກສອງຄົນທີ່ໄດ້ຍິນໂຢຮັນເວົ້າແລະຕິດຕາມພຣະເຢຊູຄືອັນເດອາ, ອ້າຍຂອງຊີໂມນເປໂຕ.[41]ເຂົາໄດ້ໄປຫາຊີ-
ໂມນອ້າຍຂອງຕົນແລະບອກວ່າ, "ເຮົາໄດ້ພົບພຣະເມຊີອາແລ້ວ" (ຫມາຍເຖິງ ພຣະຄຣິດ).[42]ແລ້ວເຂົາກໍພາທ່ານມາຫາພຣະເຢຊູ, ແລະພຣະ-
ເຢຊູເບິ່ງເຂົາແລ້ວກ່າວວ່າ, "ທ່ານຄືຊີໂມນລູກຂອງໂຢຮັນ, ທ່ານຈະຖືກເອີ້ນວ່າ ເກຟາ" (ແປວ່າ: ເປໂຕ).
[43]ວັນຕໍ່ມາ, ເມື່ອພຣະເຢຊູຕ້ອງການຈາກໄປທີ່ແຂວງຄາລີເລ, ພຣະອົງຊົງພົບກັບຟີລິບແລະກ່າວກັບລາວວ່າ, "ຈົ່ງຕາມເຮົາມາ".[44]ຟີ-
ລິບມາຈາກເບັດຊາອີດາ, ເມືອງຂອງອັນເດອາແລະເປໂຕ.[45]ຟີລິບໄດ້ພົບກັບນະທານາເອັນແລ້ວບອກກັບເຂົາວ່າ, "ເຮົາໄດ້ພົບພຣະອົງຜູ້ຊຶ່ງໂມ-
ເຊໄດ້ກ່າວເຖິງໃນພຣະບັນຍັດ, ແລະທີ່ພວກຜູ້ປະກາດພຣະທັມໄດ້ກ່າວເຖິງຄື: ພຣະເຢຊູລູກຂອງໂຢເຊັບ, ຈາກເມືອງນາຊາເຣັດ."
[46]ນະທານາເອັນເວົ້າກັບທ່ານວ່າ, "ມີສິ່ງດີອັນໃດທີ່ມາຈາກນາຊາເຣັດດ້ວຍຫລື?" ຟີລິບຕອບກັບເຂົາວ່າ, "ຈົ່ງມາແລະເບິ່ງເອົາເອງເຖີດ."[47]ພຣະ-
ເຢຊູເບິ່ງເຫັນນະທານາເອັນກຳລັງມາຫາພຣະອົງ ຈຶ່ງຊົງກ່າວເຖິງລາວວ່າ, "ເບິ່ງແມ, ຊົນຊາດອິຣາເອນທີ່ແທ້ຈິງ ຜູ້ຊຶ່ງບໍ່ມີອຸ-
ບາຍຫລອກຫລວງ."[48]ນະທານາເອັນເວົ້າກັບພຣະອົງວ່າ, "ທ່ານຮູ້ຈັກຂ້ານ້ອຍດ້ວຍຫລື?" ພຣະເຢຊູຕອບລາວວ່າ, "ກ່ອນທີ່ຟີລິບຈະເອີ້ນທ່ານ,
ເຮົາເຫັນທ່ານ, ຕອນທີ່ທ່ານຢູ່ກ້ອງຕົ້ນໝາກເດື່ອເທດ."
[49]ນະທານາເອັນທູນຕອບວ່າ, "ຣັບບີ, ພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ! ພຣະອົງຊົງເປັນກະສັດຂອງຊາດອິສຣາເອນ!"[50]ພຣະ-
ເຢຊູຕອບເພີ່ນວ່າ, "ເພາະເຮົາບອກກັບທ່ານວ່າ 'ເຮົາເຫັນທ່ານຢູ່ກ້ອງຕົ້ນໝາກເດື່ອ' ທ່ານຈຶ່ງເຊື່ອເຮົາຫລື?
ທ່ານຈະເຫັນສິ່ງທີ່ຍິ່ງໃຫຍ່ກວ່ານີ້."[51]"ແນ່ແທ້, ແນ່ແທ້, ເຮົາບອກກັບທ່ານວ່າ ທ່ານຈະໄດ້ເຫັນທ້ອງຟ້າສະຫວັນເປີດອອກ ແລະເທ-
ວະດາຂອງພຣະເຈົ້າ ຂຶ້ນໆ ລົງໆ ຢູ່ເທິງບຸດມະນຸດ."

 generated on Tue Jun 17 19:01:42 2025

2 1ສາມວັນຕໍ່ມາ ມີງານສົມລົດທີ່ບ້ານການາໃນແຂວງຄາລີເລ ແລະມານດາຂອງພຣະເຢຊູກໍຢູ່ທີ່ນັ້ນນຳ.2ພຣະເຢຊູແລະເຫລົ່າສາ-
ວົກກໍໄດ້ຮັບເຊີນໄປໃນງານສົມຣົດດ້ວຍ.

3ເມື່ອເຫລົ້າແວງຫມົດ, ມານດາຂອງພຣະເຢຊູມາທູນພຣະອົງວ່າ, “ພວກເຂົາບໍ່ມີເຫລົ້າແວງແລ້ວ.”4ພຣະເຢຊູຊົງຕອບນາງວ່າ, “ນາງເອີຍ,
ທ່ານມາຫາເຮົາເຮັດຫຍັງ? ຍັງບໍ່ເຖິງເວລາຂອງເຮົາ.”5ມານດາຂອງພຣະອົງບອກກັບຄົນໃຊ້ວ່າ, “ບໍ່ວ່າພຣະອົງບອກອັນໃດແກ່ທ່ານ,
ຈົ່ງເຮັດຕາມ.”
6ຂະນະນັ້ນ ມີອ່າງຫີນຢູ່ທີ່ນັ້ນຫົກໜ່ວຍທີ່ເອົາໄວ້ໃຊ້ສຳລັບເຮັດພິທີຊໍາຣະຂອງພວກຢິວ,
ອ່າງແຕ່ລະໜ່ວຍສາມາດບັນຈຸນ້ຳໄດ້ແປດສິບເຖິງຮ້ອຍຊາວລິດ.7ພຣະເຢຊູຊົງບອກກັບພວກເຂົາວ່າ, “ຈົ່ງຕັກນ້ຳໃສ່ອ່າງແຕ່ລະໜ່ວຍໃຫ້ເຕັມ.”
ພວກເຂົາຈຶ່ງຕັກນ້ຳໃສ່ອ່າງເຫລົ່ານັ້ນເຕັມພຽງປາກອ່າງ.8ແລ້ວພຣະອົງຊົງບອກກັບພວກຄົນໃຊ້ວ່າ, “ຈົ່ງຕັກແລະນຳໄປໃຫ້ພະນັກງານເສີບເນີ”
ພວກເຂົາກໍເຮັດຕາມ.
9ຫົວໜ້າພະນັກງານເສີບຊີມນ້ຳລ້າທີ່ກາຍເປັນເຫລົ້າແວງນັ້ນ, ແຕ່ເພິ່ນບໍ່ຮູ້ວ່າເຫລົ້າແວງນັ້ນມາຈາກໃສ
(ແຕ່ຄົນໃຊ້ທີ່ຕັກນ້ຳໄປໃຫ້ຫົວຫນ້ານັ້ນກໍຮູ້ດີ). ແລ້ວເພິ່ນຈຶ່ງເອີ້ນເຈົ້າບ່າວມາ10ແລ້ວເວົ້າກັບເຂົາວ່າ,
“ທຸກຄົນເຄີຍເອົາເຫລົ້າແວງອັນດີມາໃຫ້ກ່ອນ, ແລ້ວຈຶ່ງເອົາອັນບໍ່ດີມາໃຫ້ເມື່ອແຂກດື່ມ ໃຫ້ເມື່ອຄົນເມົາແລ້ວ. ແຕ່ທ່ານໄດ້ກັກເຫລົ້າແວງອັນດີໆ
ໄວ້ຈົນເຖິງຕອນນີ້.”
11ນີ້ຄືຫມາຍສຳຄັນຄັ້ງທຳອິດທີ່ພຣະເຢຊູເຮັດໃນບ້ານການາແຂວງຄາລີເລ, ແລະພຣະອົງໄດ້ຊົງສຳແດງຣິດທານຸພາບຂອງພຣະອົງ, ແລະ
ພວກສາວົກກໍເຊື່ອໃນພຣະອົງ.
12ຫລັງຈາກນັ້ນ, ພຣະເຢຊູ, ມານດາ, ແລະນ້ອງຊາຍຂອງພຣະອົງ, ແລະສາວົກຂອງພຣະອົງກໍລົງໄປຍັງເມືອງກາເປນາອູມ
ພວກເຂົາຢູ່ທີ່ນັ້ນປະມານສອງສາມມື້.
13ເມື່ອເທສະການປັດສະຄາຂອງຄົນຢິວໃກ້ເຂົ້າມາ, ແລະພຣະເຢຊູສະເດັດຂຶ້ນໄປຍັງນະຄອນເຢຣູຊາເລັມ.14ພຣະອົງໄດ້ພົບຄົນຂາຍ ງົວ, ແກະ,
ແລະນົກເຂົາ, ແລະພວກຄົນແລກປ່ຽນເງິນກໍນັ່ງຢູ່ທີ່ນັ້ນດ້ວຍ.
15ພຣະອົງຊົງເອົາເຊືອກມາເຮັດເປັນແສ້ ແລະຂັບໄລ່ຄົນເຫລົ່ານັ້ນອອກໄປຈາກບໍຣິເວນພຣະວິຫານ, ລວມທັງແກະແລະງົວດ້ວຍ.
ພຣະອົງຊົງຖອກເງິນຂອງພວກແລກປ່ຽນເງິນແລະຂວ້າໂຕະຂອງພວກເຂົາ.16ແລ້ວພຣະອົງຊົງກ່າວແກ່ບັນດາຄົນທີ່ຂາຍນົກເຂົາວ່າ,
“ເອົາຂອງເຫລົ່ານີ້ອອກໄປຈາກທີ່ນີ້ເສັຽ. ເຊົາເຮັດໃຫ້ທີ່ສະຖິດຂອງພຣະບິດາຂອງເຮົາໃຫ້ເປັນຕະຫລາດເສັຽເທາະ.”
17ເຫລົ່າສາວົກຂອງພຣະອົງຣະນຶກເຖິງຄຳທີ່ໄດ້ຖືກຂຽນໄວ້ວ່າ, “ຄວາມຮ້ອນຮົນໃນເລື່ອງທີ່ສະຖິດຂອງພຣະອົງຈະເຜົາຜານພຣະ-
ອົງ.”18ແລ້ວພວກຢິວທີ່ມີອຳນາດກໍໂຕ້ຕອບກັບພຣະອົງວ່າ, “ທ່ານຈະສຳແດງຫມາຍສຳຄັນອັນໃດໃຫ້ແກ່ເຮົາ
ໃນເມື່ອທ່ານເຮັດສິ່ງທັງປວງເຫລົ່ານີ້?”19ພຣະເຢຊູຕອບວ່າ, “ຖ້າມ້າງພຣະວິຫານນີ້ ແລ້ວເຮົາຈະສ້າງຂຶ້ນໃຫມ່ໃນສາມວັນ.”
20ແລ້ວຄົນຢິວທີ່ມີອຳນາດກໍເວົ້າວ່າ, “ພຣະວິຫານນີ້ໃຊ້ເວລາສ້າງທັງຫມົດສີ່ສິບຫົກປີຈຶ່ງສຳເລັດ,
ແຕ່ທ່ານຈະສ້າງຂຶ້ນໃຫມ່ໃນສາມວັນຫລື?”21ຢ່າງໃດກໍຕາມ, ພຣະວິຫານທີ່ພຣະອົງຫມາຍເຖິງນັ້ນຄືພຣະກາຍຂອງພຣະອົງ.22ເພາະເມື່ອພຣະ-
ອົງຟື້ນຂຶ້ນມາຈາກຄວາມຕາຍແລ້ວ, ພວກສາວົກຂອງພຣະອົງຈຶ່ງຣະນຶກເຖິງສິ່ງທີ່ພຣະອົງກ່າວໄວ້, ແລະພວກເຂົາໄດ້ເຊື່ອໃນພຣະຄັມພີ
ແລະໃນຖ້ອຍຄຳນີ້ທີ່ພຣະອົງໄດ້ກ່າວເອົາໄວ້.
23ເມື່ອພຣະອົງຍັງຢູ່ໃນນະຄອນເຢຣູຊາເລັມໃນຊ່ວງເທສະການປັດສະຄາ, ມີຫລາຍຄົນໄດ້ເຊື່ອໃນພຣະນາມຂອງພຣະອົງ
ເມື່ອພວກເຂົາໄດ້ເຫັນຫມາຍສຳຄັນທີ່ພຣະອົງເຮັດ.24ແຕ່ພຣະເຢຊູບໍ່ໄວ້ໃຈພວກເຂົາ, ເພາະພຣະອົງຊົງຮູ້ຈັກພວກເຂົາທັງຫມົດ25ເພາະພຣະ-
ອົງບໍ່ຕ້ອງການໃຫ້ໃຜມາເປັນພະຍານແກ່ພຣະອົງດ້ວຍເລື່ອງຂອງມະນຸດ, ເພາະພຣະອົງຮູ້ວ່າມີອັນໃດຢູ່ໃນພວກເຂົາ.


generated on Tue Jun 17 19:01:42 2025

3 1ຂະນະນັ້ນ ມີຟາຣີຊາຍທີ່ເປັນຜູ້ນໍາຊາວຢິວຄົນໜຶ່ງ ຊື່ນີໂກເດມ.2ຊາຍຄົນນີ້ມາຫາພຣະເຢຊູໃນເວລາກາງຄືນແລະເວົ້າກັບພຣະອົງວ່າ,
"ຣັບບີ, ພວກຂ້ານ້ອຍຮູ້ວ່າທ່ານເປັນອາຈານທີ່ມາຈາກພຣະເຈົ້າ,
ເພາະບໍ່ມີຜູ້ໃດອາດສາມາດເຮັດການອັດສະຈັນເຫລົ່ານີ້ໄດ້ເຫມືອນທ່ານເຮັດຢູ່, ເວັ້ນແຕ່ຈາກພຣະເຈົ້າຈະຊົງສະຖິດຢູ່ກັບຜູ້ນັ້ນ."

3ພຣະເຢຊູຕອບເຂົາວ່າ, "ເຮົາບອກຄວາມຈິງແກ່ທ່ານວ່າ, ນອກເສັຽຈາກຄົນນັ້ນຈະບັງເກີດໃຫມ່, ເຂົາຈະບໍ່ສາມາດເຫັນຣາ-
ຊະອານາຈັກຂອງພຣະເຈົ້າ."4ນີໂກເດມທູນກັບພຣະອົງວ່າ, "ຄົນເຮົາຈະບັງເກີດໃຫມ່ໄດ້ຢ່າງໃດ ຫາກເຂົາມີອາຍຸຫລາຍແລ້ວ?
ເຂົາຈະກັບເຂົ້າໄປຢູ່ໃນທ້ອງມາດາເປັນເທື່ອທີສອງ, ແລະເກີດໃຫມ່ໄດ້ຫລື?"
5ພຣະເຢຊູຕອບວ່າ, "ເຮົາບອກຄວາມຈິງແກ່ທ່ານວ່າ, ຖ້າຄົນນັ້ນບໍ່ເກີດໃຫມ່ໂດຍນ້ຳແລະພຣະວິນຍານ, ເຂົາບໍ່ສາມາດເຂົ້າໃນລາ-
ຊະອານາຈັກຂອງພຣະເຈົ້າໄດ້.6ສິ່ງຊຶ່ງເກີດຈາກເນື້ອກາຍກໍເປັນເນື້ອກາຍ, ສິ່ງຊຶ່ງເກີດຈາກພຣະວິນຍານກໍເປັນພຣະວິນຍານ.
7ຢ່າປະຫລາດໃຈໃນສິ່ງທີ່ເຮົາກ່າວແກ່ທ່ານວ່າ 'ທ່ານຈະຕ້ອງບັງເກີດໃໝ່.8ລົມພັດໄປຕາມໃຈຂອງມັນ; ທ່ານໄດ້ຍິນສຽງຂອງລົມ,
ແຕ່ທ່ານບໍ່ຮູ້ວ່າມັນມາຈາກໃສ ແລ້ວຈະໄປໃສ. ທຸກຄົນທີ່ບັງເກີດໃຫມ່ໂດຍພຣະວິນຍານກໍເປັນເຊັ່ນນັ້ນ."
9ນີໂກເດມຕອບພຣະອົງວ່າ, "ສິ່ງເຫລົ່ານີ້ຈະເກີດຂຶ້ນໄດ້ຢ່າງໃດ?"10ພຣະເຢຊູຕອບວ່າ, "ທ່ານເປັນອາຈານຂອງຄົນອິສຣາເອນ,
ເຫດໃດທ່ານຈຶ່ງຍັງບໍ່ເຂົ້າໃຈສິ່ງເຫລົ່ານີ້?11ເຮົາບອກຄວາມຈິງແກ່ທ່ານວ່າ, ເຮົາເວົ້າໃນສິ່ງທີ່ເຮົາຮູ້,
ແລະເຮົາເປັນພະຍານໃນສິ່ງທີ່ພວກເຮົາໄດ້ເຫັນ. ແຕ່ເຖິງຢ່າງນັ້ນທ່ານກໍຍັງບໍ່ຍອມຮັບຄໍາພະຍານຂອງເຮົາ.
12ຖ້າເຮົາບອກທ່ານເຖິງສິ່ງຝ່າຍໂລກແລະທ່ານຍັງບໍ່ເຊື່ອ, ແລ້ວທ່ານຈະເຊື່ອເຮົາໄດ້ຢ່າງໃດ ຫາກເຮົາບອກທ່ານເຖິງສິ່ງທີ່ກ່ຽວກັບສະຫວັນ?
13ບໍ່ມີຜູ້ໃດໄດ້ເຄີຍຂຶ້ນໄປສູ່ສະຫວັນ ຍົກເວັ້ນແຕ່ພຽງທ່ານຜູ້ນັ້ນທີ່ມາຈາກສະຫວັນ ຄືບຸດມະນຸດ."
14ເຫມືອນໂມເຊທີ່ໄດ້ຍົກງູຂຶ້ນໃນປ່າ, ບຸດມະນຸດກໍຈະຕ້ອງຖືກຍົກຂຶ້ນເຊັ່ນດຽວກັນ,15ເພື່ອທຸກຄົນທີ່ເຊື່ອໃນພຣະອົງຈະໄດ້ຮັບມີຊີວິດອັນຕະ-
ຫລອດໄປເປັນນິດ.
16ເພາະວ່າພຣະເຈົ້າຊົງຮັກໂລກ ຈົນພຣະອົງໄດ້ປຣະທານພຣະບຸດພຽງອົງດຽວຂອງພຣະອົງ, ເພື່ອທຸກຄົນທີ່ເຊື່ອໃນພຣະອົງນັ້ນບຈະບໍ່ຕາຍ
ແຕ່ມີຊີວິດອັນຕະຫລອດໄປເປັນນິດ.17ເພາະວ່າພຣະເຈົ້າບໍ່ໄດ້ສົ່ງພຣະບຸດເຂົ້າມາໃນໂລກເພື່ອຈະລົງໂທດໂລກນີ້, ແຕ່ເພື່ອ-
ໂລກໃຫ້ລອດໂດຍຜ່ານທາງພຣະອົງ.18ຄົນທີ່ເຊື່ອໃນພຣະອົງຈະບໍ່ຖືກຕັດສິນໂທດ, ແຕ່ຄົນທີ່ບໍ່ເຊື່ອໃນພຣະອົງກໍໄດ້ຖືກຕັດສິນລົງໂທດແລ້ວ,
ເພາະວ່າເຂົາບໍ່ເຊື່ອພຣະນາມພຣະບຸດອົງດຽວຂອງພຣະເຈົ້າ.
19ນີ້ຄືສາເຫດຂອງການພິພາກສາຄື: ຄວາມສະຫວ່າງໄດ້ເຂົ້າມາໃນໂລກນີ້, ແລະມະນຸດນັ້ນຮັກຄວາມມືດແທນທີ່ຈະຮັກຄວາມສະຫວ່າງ
ເພາະວ່າການກະທໍາຂອງເຂົານັ້ນຊົ່ວຮ້າຍ.20ເພາະທຸກຄົນທີ່ເຮັດການຊົ່ວກໍຊັງຄວາມສະຫວ່າງ ແລະບໍ່ມາເຖິງຄວາມສະຫວ່າງ,
ເພື່ອຄວາມຊົ່ວຂອງເຂົາຈະບໍ່ຖືກເປີດເຜີຍ.21ແຕ່ສໍາລັບຄົນເຫລົ່ານັ້ນທີ່ປະພຶດຕາມຄວາມຈິງກໍຈະມາເຖິງຄວາມສະຫວ່າງ ເພື່ອທີ່-
ການກະທໍາຂອງເຂົາທີ່ຈະໄດ້ສໍາເລັດໃນພຣະເຈົ້າຈະໄດ້ປະກົດ."
22ຫລັງຈາກນີ້, ພຣະເຢຊູແລະພວກສາວົກໄດ້ໄປຍັງແຂວງຢູດາຍ. ທີ່ນັ້ນພຣະອົງໃຊ້ເວລາກັບພວກສາວົກແລະໃຫ້ຮັບບັບຕິສະມາແກ່ພວກເຂົາ.
23ໃນຂະນະນັ້ນໂຢຮັນກໍໃຫ້ຮັບບັບຕິສະມາຢູ່ທີ່ບ້ານໄອໂນນ ໃກ້ບ້ານຊາລາອີມ ເພາະທີ່ນັ້ນມີນ້ຳຫລາຍກວ່າ. ຜູ້ຄົນໄດ້ມາຫາເພິ່ນແລະຮັບບັບຕິ-
ສະມາ,24ເພາະໃນຕອນນັ້ນໂຢຮັນຍັງບໍ່ໄດ້ຖືກຄັງຄຸກ.
25ເກີດການໂຕ້ແຍ້ງກັນຂຶ້ນລະຫວ່າງສາວົກບາງຄົນຂອງໂຢຮັນແລະຄົນຢິວດ້ວຍເລື່ອງພິທີຊໍາຣະລ້າງ.
26ພວກເຂົາໄປຫາໂຢຮັນແລະເວົ້າກັບທ່ານວ່າ, "ຣັບບີ, ຄົນນັ້ນທີ່ເຄີຍຢູ່ກັບທ່ານອີກຟາກຂອງແມ່ນ້ຳຢໍແດນ, ຄົນທີ່ທ່ານມາເພື່ອເປັນພະຍານ,
ເຂົາກໍາລັງໃຫ້ຮັບບັບຕິສະມາ, ແລະຄົນທັງຫມົດກໍກໍາລັງໄປທີ່ນັ້ນ."
27ໂຢຮັນຕອບວ່າ, "ມະນຸດບໍ່ສາມາດຮັບສິ່ງໃດໄດ້ ນອກຈາກສິ່ງນັ້ນຖືກມອບແກ່ເຂົາຈາກສະຫວັນ.28ທ່ານເອງກໍສາມາດເປັນພະ-
ຍານເຖິງສິ່ງທີ່ເຮົາໄດ້ກ່າວວ່າ 'ຂ້າພຣະເຈົ້າບໍ່ແມ່ນພຣະຄຣິດ,' ແຕ່ 'ຂ້າພຣະເຈົ້າໄດ້ຖືກສົ່ງມາກ່ອນທ່ານຜູ້ນັ້ນ.'
29ເຈົ້າສາວເປັນຂອງເຈົ້າບ່າວສັນໃດ. ຂະນະນີ້ສະຫາຍຂອງເຈົ້າບ່າວທີ່ຢືນຢູ່ ແລະໄດ້ຍິນສຽງຂອງເຈົ້າບ່າວ ກໍຊື່ນຊົມຍິນດີຢ່າງຍິ່ງ
ເພາະສຽງຂອງເຈົ້າບ່າວ ແລະຄວາມຊື່ນຊົມຍິນດີຂອງຂ້າພຣະເຈົ້າກໍຄົບຖ້ວນແລ້ວ.30ພຣະອົງຈະຕ້ອງສໍາຄັນຫລາຍຂຶ້ນ,
ແຕ່ຂ້າພຣະເຈົ້າຈະສໍາຄັນຫນ້ອຍລົງ."
31ພຣະອົງຜູ້ມາຈາກເບື້ອງເທິງຊົງຢູ່ເຫນືອສິ່ງອື່ນໃດ. ຜູ້ທີ່ມາຈາກໂລກກໍຢູ່ຝ່າຍໂລກ ແລະກ່າວກ່ຽວກັບຝ່າຍໂລກ ພຣະອົງຜູ້ຊົງມາຈາກສະ-
ຫວັນ ກໍຢູ່ເຫນືອທຸກສິ່ງອື່ນໃດ.32ພຣະອົງຊົງເປັນພະຍານເຖິງສິ່ງທີ່ພຣະອົງໄດ້ເຫັນ ແລະໄດ້ຍິນ, ແຕ່ບໍ່ມີໃຜຍອມຮັບຄໍາພະຍານຂອງພຣະອົງ.
33ແຕ່ຄົນທີ່ຍອມຮັບຄໍາພະຍານຂອງພຣະອົງກໍໄດ້ຢືນຢັນແລ້ວວ່າພຣະເຈົ້າຊົງເປັນຈິງ.
34ເພາະຜູ້ທີ່ພຣະເຈົ້າໄດ້ສົ່ງມານັ້ນກໍກ່າວພຣະທັມຂອງພຣະເຈົ້າ. ເພາະພຣະອົງບໍ່ໄດ້ຮັບພຣະວິນຍານຢ່າງຈໍາກັດ.35ພຣະບິດາຊົງຮັກພຣະ-
ບຸດແລະໄດ້ມອບທຸກຢ່າງໄວ້ໃນພຣະຫັດຂອງພຣະອົງ.36ຄົນທີ່ເຊື່ອໃນພຣະບຸດກໍໄດ້ຮັບຊີວິດອັນຕະຫລອດໄປເປັນນິດ,
ແຕ່ສໍາລັບຜູ້ທີ່ບໍ່ເຊື່ອຟັງພຣະບຸດນັ້ນຈະບໍ່ໄດ້ເຫັນຊີວິດ, ແຕ່ພຣະພິໂຣດຂອງພຣະເຈົ້າຈະຕົກຢູ່ກັບເຂົາ."

4 [1]ເມື່ອພຣະເຢຊູຮູ້ວ່າພວກຟາຣີຊາຍໄດ້ຍິນວ່າ ພຣະອົງມີຄົນຕິດຕາມ ແລະຮັບບັບຕິສະມາຫລາຍກວ່າໂຢຮັນ,[2](ພຣະເຢຊູບໍ່ໄດ້ຊົງໃຫ້ບັບຕິ-
ສະມາເອງ ແຕ່ພວກສາວົກຂອງພຣະອົງເປັນຜູ້ໃຫ້),[3]ພຣະອົງຈຶ່ງອອກຈາກແຂວງຢູດາຍແລະກັບໄປຍັງແຂວງຄາລີເລອີກ.

[4]ພຣະອົງຈຳເປັນຕ້ອງເດີນທາງຜ່ານແຂວງຊາມາເຣັຽ.[5]ເມື່ອພຣະອົງໄດ້ສະເດັດໄປເຖິງເມືອງຫນຶ່ງຂອງແຂວງຊາມາເຣັຽຊື່ເມືອງ ຊີຂາ,
ຢູ່ໃກ້ກັບທີ່ດິນຊຶ່ງຢາໂຄບມອບໃຫ້ໂຢເຊັບລູກຊາຍຂອງຕົນ.
[6]ທີ່ນັ້ນມີນ້ຳສ້າງຂອງຢາໂຄບ. ພຣະເຢຊູເມື່ອຍກັບການເດີນທາງ ຈຶ່ງນັ່ງພັກທີ່ຂ້າງນ້ຳສ້າງນັ້ນ. ຕອນນັ້ນເປັນເວລາທ່ຽງ.[7]ຍິງຊາວຊາມາ-
ເຣັຽຄົນຫນຶ່ງໄດ້ມາຕັກນ້ຳ, ແລະພຣະເຢຊູກ່າວກັບນາງວ່າ, “ເຮົາຂໍນ້ຳໃຫ້ເຮົາດື່ມແດ່ໄດ້ບໍ.”[8]ຂະນະນັ້ນພວກສາວົກຂອງພຣະ-
ອົງເຂົ້າໄປໃນເມືອງເພື່ອຊື້ອາຫານ.
[9]ຍິງຊາວຊາມາເຣັຽທູນພຣະອົງວ່າ, “ດ້ວຍເຫດໃດທ່ານຜູ້ເປັນຄົນຢິວ, ມາຂໍດື່ມນ້ຳນຳຂ້ານ້ອຍຜູ້ເປັນຊາວຊາມາເຣັຽ?”
ເພາະຄົນຢິວມັກບໍ່ຍຸ່ງກ່ຽວໃດໆກັບຄົນຊາມາເຣັຽ.[10]ພຣະເຢຊູຊົງຕອບນາງນັ້ນວ່າ, “ຖ້າເຈົ້າໄດ້ຮູ້ຈັກຂອງປຣະທານຂອງພຣະເຈົ້າແລະຜູ້ທີ່ກຳ-
ລັງເວົ້າກັບເຈົ້າວ່າ ‘ຂໍນ້ຳໃຫ້ເຮົາດື່ມ’ ເຈົ້າຄົງຈະຂໍຈາກທ່ານຜູ້ນັ້ນ, ແລະທ່ານຄົງຈະມອບນ້ຳແຫ່ງຊີວິດນັ້ນແກ່ເຈົ້າ.”
[11]ຍິງນັ້ນຕອບພຣະອົງວ່າ, “ນາຍເອີຍ, ນາຍບໍ່ມີຄຸທີ່ຈະຕັກນ້ຳແລະນ້ຳສ້າງນີ້ກໍເລິກ. ແລ້ວນາຍຈະຫານ້ຳແຫ່ງຊີວິດນັ້ນມາແຕ່ໃສ?
[12]ນາຍບໍ່ໄດ້ຍິ່ງໃຫຍ່ກວ່າຢາໂຄບບັນພະບຸຣຸດຂອງເຮົາ, ຜູ້ໄດ້ໃຫ້ນ້ຳສ້າງນີ້ແກ່ເຮົາແລະດື່ມ, ທັງຕົວທ່ານເອງ ທັງບັນດາລູກແລະຝູງສັດ.”
[13]ພຣະເຢຊູຕອບຍິງນັ້ນວ່າ, “ທຸກຄົນທີ່ດື່ມນ້ຳຈາກບໍ່ນີ້ກໍຍັງຈະກະຫາຍນ້ຳອີກຄັ້ງ.[14]ແຕ່ໃຜກໍຕາມທີ່ດື່ມນ້ຳທີ່ເຮົາມອບໃຫ້,
ເຂົາຈະບໍ່ກະຫາຍຫິວອີກເລີຍ, ເພາະນ້ຳຊຶ່ງເຮົາຈະໃຫ້ແກ່ເຂົານັ້ນຈະກາຍເປັນນ້ຳພຸໃນຕົວເຂົາ, ພຸ່ງຂຶ້ນເຖິງຊີວິດອັນຕະຫລອດໄປເປັນນິດ.”
[15]ຍິງນັ້ນທູນພຣະອົງວ່າ, “ນາຍເອີຍ, ຂໍນ້ຳນັ້ນໃຫ້ຂ້ານ້ອຍເພື່ອຂ້າ-
ນ້ອຍຈະບໍ່ກະຫາຍແລະບໍ່ຕ້ອງມາຕັກທີ່ບໍ່ນີ້ອີກ.”[16]ພຣະເຢຊູບອກກັບຍິງນັ້ນວ່າ, “ຈົ່ງໄປເອີ້ນຜົວຂອງເຈົ້າແລະກັບມາທີ່ນີ້ອີກ.”
[17]ຍິງນັ້ນຕອບວ່າ, “ຂ້ານ້ອຍບໍ່ມີຜົວ” ພຣະເຢຊູຕອບວ່າ, “ຖືກແລ້ວທີ່ເຈົ້າບອກວ່າ 'ຂ້ານ້ອຍບໍ່ມີຜົວ'.[18]ເພາະເຈົ້າໄດ້ມີຜົວມາຫ້າຄົນແລ້ວ,
ແລະຄົນທີ່ເຈົ້າມີຕອນນີ້ກໍບໍ່ແມ່ນຜົວຂອງເຈົ້າ. ທີ່ເຈົ້າເວົ້ານັ້ນເປັນຄວາມຈິງ.”
[19]ຍິງນັ້ນທູນພຣະອົງວ່າ, “ນາຍເອີຍ, ຂ້ານ້ອຍເຫັນແລ້ວວ່າ ທ່ານເປັນຜູ້ທຳນວາຍ.[20]ບັນພະບຸຣຸດຂອງພວກຂ້ານ້ອຍເຄີຍນະມັດສະການເທິງພູນີ້,
ແຕ່ພວກທ່ານບອກວ່າເຢຣູຊາເລັມ ຄືສະຖານທີ່ທີ່ຄົນຈະໄປນະມັດສະການ.”
[21]ພຣະເຢຊູກ່າວກັບນາງວ່າ, “ຈົ່ງເຊື່ອເຮົາເທາະ, ຍິງເອີຍ, ເວລານັ້ນມາເຖິງ ເມື່ອເຈົ້າຈະນະມັດສະການພຣະບິດາບໍ່ໄດ້ໃນທີ່ພູນີ້ ຫລື ທີ່ກຸງເຢຣູ-
ຊາເລັມ.[22]ເຈົ້ານະມັດສະການໃນສິ່ງທີ່ເຈົ້າບໍ່ຮູ້ຈັກ. ເຮົານະມັດສະການສິ່ງທີ່ເຮົາຮູ້ຈັກ, ເພາະຄວາມລອດພົ້ນນັ້ນມາຈາກຄົນຢິວ.
[23]ແຕ່ຊົ່ວໂມງນັ້ນໃກ້ເຂົ້າມາແລ້ວ, ແລະຕອນນີ້ກໍມາເຖິງແລ້ວ, ເມື່ອຜູ້ທີ່ນະມັດສະການທີ່ແທ້ຈິງຈະນະມັດສະ-
ການພຣະບິດາໃນວິນຍານແລະໃນຄວາມຈິງ, ເພາະພຣະບິດາຊົງສະແຫວງຫາຄົນແບບນັ້ນທີ່ຈະນະມັດສະການພຣະອົງ.[24]ພຣະເຈົ້າເປັນພຣະ-
ວິນຍານແລະຜູ້ທີ່ນະມັດສະການພຣະອົງຕ້ອງນະມັດສະການໃນວິນຍານແລະໃນຄວາມຈິງ.”
[25]ຍິງນັ້ນທູນພຣະອົງວ່າ, “ຂ້ານ້ອຍຮູ້ວ່າພຣະເມຊີອາ ກຳລັງສະເດັດມາ (ຜູ້ທີ່ເອີ້ນວ່າພຣະຄຣິດ). ເມື່ອພຣະອົງສເດັດມາ, ພຣະ-
ອົງຈະອະທິບາຍທຸກສິ່ງແກ່ພວກເຮົາ.”[26]ພຣະເຢຊູກ່າວກັບນາງວ່າ, “ເຮົາຜູ້ທີ່ເວົ້າກັບເຈົ້າຢູ່ຕອນນີ້, ຄືຜູ້ນັ້ນ.”
[27]ເມື່ອພວກສາວົກຂອງພຣະອົງໄດ້ກັບມາ, ພວກເຂົາຕ່າງປະຫລາດໃຈວ່າເປັນຫຍັງພຣະອົງຈຶ່ງສົນທະນາກັບຜູ້ຍິງ, ແຕ່ບໍ່ມີໃຜຖາມວ່າ,
“ພຣະອົງຕ້ອງການອັນໃດ?” ຫລື “ເຫດໃດພຣະອົງຈຶ່ງສົນທະນາກັບນາງ?”
[28]ແລ້ວຍິງນັ້ນກໍປະຫມໍ້ນ້ຳຂອງນາງໄວ້ ແລ້ວກັບໄປໃນເມືອງ, ແລະ ບອກຄົນທັງປວງວ່າ,[29]“ຈົ່ງມາ,
ມາເບິ່ງຊາຍຜູ້ຫນຶ່ງທີ່ບອກຂ້ອຍທຸກຢ່າງທີ່ຂ້ອຍເຄີຍເຮັດ. ພຣະອົງເປັນພຣະຄຣິດຫລືບໍ່?”[30]ພວກເຂົາກໍອອກຈາກເມືອງໄປຫາພຣະອົງ.
[31]ໃນລະຫວ່າງນັ້ນ, ພວກສາວົກກໍຊວນພຣະອົງ ເວົ້າວ່າ, “ຣັບບີ, ເຊີນຮັບປະທານອາຫານ.”[32]ແຕ່ພຣະອົງຕອບກັບພວກເຂົາວ່າ, “ເຮົາມີອາ-
ຫານທີ່ເຮົາກິນທີ່ພວກທ່ານບໍ່ຮູ້ຈັກ.”[33]ແລ້ວພວກສາວົກກໍເວົ້າກັນວ່າ, “ຍັງບໍ່ມີໃຜເອົາອາຫານມາໃຫ້ພຣະອົງແມ່ນບໍ?”
[34]ພຣະເຢຊູກ່າວກັບພວກເຂົາວ່າ, “ອາຫານຂອງເຮົາຄືເຮົາຈະເຮັດຕາມພຣະທັຍຂອງຜູ້ທີ່ສົ່ງເຮົາມາ ແລະ ເຮັດງານຂອງພຣະອົງຜູ້ນັ້ນສຳເລັດ.
[35]ທ່ານເວົ້າວ່າ 'ອີກຕັ້ງສີ່ເດືອນ ກວ່າຈະຮອດເວລາເກັບກ່ຽວ? ເຮົາບອກສິ່ງນີ້ກັບທ່ານວ່າ, ຈົ່ງເງີຍໜ້າເບິ່ງທົ່ງນາເຫລົ່ານັ້ນ,
ພວກມັນພ້ອມທີ່ຈະຖືກເກັບກ່ຽວແລ້ວ![36]ຜູ້ທີ່ກຳລັງເກັບກ່ຽວກໍໄດ້ຮັບຄ່າຈ້າງ ແລະຮິບໂຮມຜົນສຳລັບຊີວິດອັນຕະຫລອດໄປເປັນນິດ,
ເພື່ອຜູ້ທີ່ຫວ່ານແລະຜູ້ເກັບກ່ຽວຈະໄດ້ຊົມຊື່ນຍິນດີຮ່ວມກັນ.
[37]ເພາະມີຄຳກ່າວໄວ້ໃນນີ້ວ່າ ‘ຄົນຫນຶ່ງຫວ່ານແລະອີກຄົນຫນຶ່ງກ່ຽວ’ ກໍເປັນຈິງ.[38]ເຮົາສົ່ງທ່ານໄປເກັບກ່ຽວສິ່ງທີ່ທ່ານບໍ່ໄດ້ຫວ່ານ.
ຄົນອື່ນໄດ້ເຮັດງານນັ້ນ, ແລະທ່ານກໍໄດ້ເຂົ້າມາຮ່ວມແຮງກັບຂອງພວກເຂົາ.”
[39]ມີຊາວຊາມາເຣັຽຫລາຍຄົນໃນເມືອງນັ້ນເຊື່ອໃນພຣະອົງ ເພາະວ່າສິ່ງທີ່ຍິງຜູ້ນັ້ນໄດ້ເປັນພະຍານຢືນຢັນນວ່າ,
“ທ່ານບອກຂ້ອຍເຖິງທຸກສິ່ງທີ່ຂ້ອຍໄດ້ເຮັດ.”[40]ເມື່ອຊາວຊາມາເຣັຽ ມາຫາພຣະອົງ, ພວກເຂົາຂໍໃຫ້ພຣະອົງພັກຢູ່ກັບພວກເຂົາ,
ແລະພຣະອົງຈຶ່ງພັກຢູ່ທີ່ນັ້ນສອງວັນ.
[41]ມີຄົນອື່ນອີກຫລວງຫລາຍມາເຊື່ອດ້ວຍພຣະທັມຂອງພຣະອົງ.[42]ພວກເຂົາກ່າວກັບຍິງນັ້ນວ່າ, “ເຮົາບໍ່ໄດ້ເຊື່ອເພາະສິ່ງທີ່ເຈົ້າເວົ້າອີກຕໍ່ໄປ,
ເພາະພວກເຮົາໄດ້ຍິນ, ແລະພວກເຮົາຮູ້ວ່າແທ້ຈິງແລ້ວທ່ານຜູ້ນີ້ຄືພຣະຜູ້ຊ່ວຍໃຫ້ລອດຂອງໂລກນີ້.”
[43]ຫລັງຈາກນັ້ນສອງສາມມື້, ພຣະອົງສະເດັດອອກຈາກທີ່ນັ້ນໄປຍັງແຂວງຄາລີເລ.[44]ເພາະພຣະເຢຊູໄດ້ປະກາດເອງວ່າຜູ້ປະກາດພຣະ-
ທັມບໍ່ໄດ້ຮັບກຽດໃນບ້ານເກີດຂອງຕົນເອງ.[45]ເມື່ອພຣະອົງມາເຖິງແຂວງຄາລີເລ, ຊາວຄາລີເລໄດ້ຕ້ອນຮັບພຣະອົງ. ພວກເຂົາໄດ້ເຫັນສິ່ງສາຣະ-
ພັດທີ່ພຣະອົງຊົງກະທຳໃນເທສະການໃນເຢຣູຊາເລັມ, ເພາະພວກເຂົາກໍໄປໃນເທສະການເໝືອນກັນ.
[46]ແລ້ວພຣະອົງໄດ້ສະເດັດກັບມາທີ່ບ້ານການາ ແຂວງຄາລີເລອີກຄັ້ງ, ບ່ອນທີ່ພຣະອົງໄດ້ປ່ຽນນ້ຳໃຫ້ກາຍເປັນເຫລົ້າແວງນັ້ນ. ທີ່ນັ້ນມີເສນາບໍ-
ດີຄົນຫນຶ່ງ ຊຶ່ງລູກຊາຍຂອງທ່ານກຳລັງປ່ວຍຢູ່ທີ່ເມືອງກາເປນາອູມ.[47]ເມື່ອທ່ານໄດ້ຍິນຂ່າວວ່າພຣະເຢຊູໄດ້ສະເດັດຈາກແຂວງຢູ-
ດາຍມາເຖິງແຂວງຄາລີເລ, ທ່ານໄດ້ໄປຫາພຣະເຢຊູແລະຂໍໃຫ້ພຣະອົງໄປໂຜດຮັກສາລູກຂອງຕົນທີ່ກຳລັງຈະຕາຍ.


generated on Tue Jun 17 19:01:42 2025

[48]ແລ້ວພຣະເຢຊູຈຶ່ງບອກກັບເພິ່ນວ່າ, “ຈົນກວ່າທ່ານຈະໄດ້ເຫັນໝາຍສຳຄັນແລະການອັດສະຈັນ ທ່ານຈະບໍ່ເຊື່ອ.”[49]“ນາຍເອີຍ,
ຂໍເຊີນໄປກ່ອນທີ່ລູກຂ້ານ້ອຍຈະຕາຍ.”[50]ພຣະເຢຊູບອກກັບທ່ານວ່າ, “ຈົ່ງໄປເຖີດ ລູກຂອງທ່ານຈະເຊົາດີ” ຊາຍຄົນນັ້ນເຊື່ອພຣະທັມທີ່ພຣະ-
ເຢຊູຊົງກ່າວແກ່ເພິ່ນ, ເພິ່ນຈຶ່ງກັບໄປ.
[51]ໃນຂະນະທີ່ທ່ານກຳລັງໄປ, ຄົນໃຊ້ຂອງເພິ່ນກໍມາຕ້ອນຮັບ, ແລ້ວບອກວ່າລູກຂອງທ່ານມີຊີວິດຢູ່.[52]ເພິ່ນຈຶ່ງຖາມຄົນໃຊ້ວ່າ ເປັນເວ-
ລາໃດທີ່ລູກຊາຍຂອງເພິ່ນເຊົາປ່ວຍ. ພວກເຂົາຕອບວ່າ, “ມື້ວານນີ້ເວລາປະມານບ່າຍໂມງທີ່ລາວເຊົາໄຂ້.”
[53]ແລ້ວບິດາຂອງເດັກຄົນນັ້ນກໍນຶກໄດ້ວ່າເປັນຊ່ວງເວລາທີ່ພຣະເຢຊູກ່າວກັບຕົນວ່າ, “ລູກຂອງທ່ານຈະມີຊີວິດຢູ່.”
ທ່ານເອງແລະຄົນໃນຄອບຄົວຂອງທ່ານຕ່າງກໍຮັບເຊື່ອ.[54]ນີ້ເປັນໝາຍສຳຄັນທີສອງທີ່ພຣະເຢຊູໄດ້ເຮັດ ຂະນະທີ່ພຣະ-
ອົງສະເດັດອອກຈາກແຂວງຢູດາຍໄປຍັງແຂວງຄາລີເລ.

 generated on Tue Jun 17 19:01:42 2025

5 [1]ຫລັງຈາກນັ້ນກໍມີງານເທສະການຂອງຄົນຢິວ, ພຣະເຢຊູຈຶ່ງສະເດັດໄປຍັງນະຄອນເຢຣູຊາເລັມ.[2]ຂະນະນັ້ນໃກ້ໆ ກັບປະ-
ຕູແກະມີສະນ້ຳແຫ່ງຫນຶ່ງ ໃນພາສາເຮັບເຣີເອີ້ນວ່າ ເບັດສາທາ, ມີສາລາອ້ອມຢູ່ຫ້າຫລັງ.[3]ໃນສາລາເຫລົ່ານັ້ນມີຄົນປ່ວຍເປັນຈຳ-
ນວນຫລາຍຄືຄົນຕາບອດ, ຄົນຂາເສັ້ງ, ແລະຄົນອຶ່ງຄະລິບນອນຢູ່ [ຄອຍຖ້ານ້ຳເຟືອນ.[4]ດ້ວຍວ່າມີເທວະດາຄົນຫນຶ່ງຂອງພຣະຜູ້ເປັນ-
ເຈົ້າລົງມາກວນນ້ຳສະນັ້ນເປັນຍາມ ແລະເມື່ອນ້ຳເຟືອນຜູ້ໃດລົງໄປໃນນ້ຳກ່ອນກໍຫາຍຈາກພະຍາດທີ່ຕົນເປັນຢູ່ນັ້ນ].

[5]ມີຊາຍຄົນຫນຶ່ງທີ່ຢູ່ນັ້ນ ລາວນອນປ່ວຍໄດ້ສາມສິບແປດປີມາແລ້ວ.[6]ເມື່ອພຣະເຢຊູເຫັນຄົນນັ້ນນອນຢູ່
ແລະຫລັງຈາກທີ່ພຣະອົງຮູ້ວ່າລາວເປັນຢູ່ຢ່າງນັ້ນເຫິງແລ້ວ ພຣະອົງກ່າວກັບລາວວ່າ, “ທ່ານຢາກຫາຍດີບໍ?”
[7]ຊາຍປ່ວຍຄົນນັ້ນຕອບວ່າ, “ນາຍເຈົ້າເອີຍ, ບໍ່ມີໃຜຈະເອົາຂ້ານ້ອຍວາງລົງໄປໃນສະເນື່ອນ້ຳນັ້ນເຟືອນຂຶ້ນ. ເມື່ອຂ້ານ້ອຍຈະລົງໄປ
ກໍມີຄົນອື່ນລົງໄປກ່ອນຂ້ານ້ອຍ.”[8]ພຣະເຢຊູບອກລາວວ່າ, “ຈົ່ງລຸກຂຶ້ນ, ຍົກເອົາບ່ອນນອນ, ແລະຍ່າງໄປເຖີດ.”
[9]ໃນທັນໃດນັ້ນຊາຍຄົນນັ້ນກໍເຊົາປ່ວຍ, ລາວລຸກຂຶ້ນແລະຍົກເອົາບ່ອນນອນຂອງຕົນແລະຍ່າງໄປ. ວັນນັ້ນເປັນສະບາໂຕ.
[10]ພວກຢິວຈຶ່ງເວົ້າກັບຄົນທີ່ເຊົາປ່ວຍນັ້ນວ່າ, “ວັນນີ້ເປັນວັນສະບາໂຕ ຫ້າມບໍ່ໃຫ້ເຈົ້າແບກບ່ອນນອນຂອງເຈົ້າ.”[11]ລາວຕອບວ່າ,
“ແຕ່ຊາຍຄົນທີ່ຮັກສາຂ້ານ້ອຍບອກຂ້ານ້ອຍ, ‘ລຸກຂຶ້ນແລະແບກບ່ອນນອນແລະຍ່າງໄປ’.”
[12]ພວກເຂົາຖາມຊາຍຄົນນັ້ນວ່າ, “ຊາຍຄົນນັ້ນທີ່ບອກເຈົ້າວ່າ, ‘ຈົ່ງແບກບ່ອນນອນແລະຍ່າງໄປແມ່ນໃຜ?”[13]ຢ່າງໃດກໍຕາມ ຄົນທີ່ໄດ້ດີພະຍາດນັ້ນ
ບໍ່ຮູ້ວ່າແມ່ນໃຜທີ່ຮັກສາເຂົາ ເພາະວ່າພຣະເຢຊູໄດ້ຫລົບໄປແລ້ວ, ເພາະທີ່ນັ້ນມີຄົນຊຸມນຸມຢູ່ຫລາຍ.
[14]ຫລັງຈາກນັ້ນ, ພຣະເຢຊູໄດ້ພົບຄົນນັ້ນທີ່ພຣະວິຫານແລະເວົ້າກັບລາວວ່າ, “ເບິ່ງແມ, ເຈົ້າເຊົາປ່ວຍແລ້ວ! ຢ່າເຮັດບາບອີກ,
ເພື່ອວ່າສິ່ງຊົ່ວຮ້າຍຈະໄດ້ບໍ່ເກີດແກ່ທ່ານ.”[15]ຊາຍຜູ້ນັ້ນຈາກທີ່ນັ້ນໄປແລະໄປລາຍງານແກ່ພວກຢິວວ່າ ຜູ້ທີ່ຮັກສາຕົວເຂົາຄືພຣະເຢຊູ.
[16]ດ້ວຍເຫດນີ້ ພວກຢິວຈຶ່ງຂົ່ມເຫັງພຣະເຢຊູ, ເພາະວ່າພຣະອົງຊົງເຮັດການນີ້ໃນວັນສະບາໂຕ.[17]ພຣະເຢຊູຕອບພວກເຂົາວ່າ, “ໃນຂະນະນີ້
ພຣະບິດາຂອງເຮົາກຳລັງເຮັດພາຣະກິດຢູ່, ແລະເຮົາເອງກໍເຮັດຢູ່ເຫມືອນກັນ.”[18]ເຫດສັນນັ້ນ, ພວກຢິວຈຶ່ງຫາທາງທີ່ຈະຂ້າພຣະອົງ
ເພາະນອກຈາກພຣະອົງຈະທຳລາຍກົດວັນສະບາໂຕແລ້ວ, ພຣະອົງຍັງເອີ້ນພຣະເຈົ້າວ່າເປັນພຣະບິດາຂອງຕົນເອງ, ຊຶ່ງເປັນການເຮັດຕົນສະ-
ເໝີພຣະເຈົ້າ.
[19]ພຣະເຢຊູຕອບພວກເຂົາວ່າ, “ເຮົາບອກຄວາມຈິງແກ່ທ່ານວ່າ, ພຣະບຸດຈະບໍ່ເຮັດສິ່ງໃດດ້ວຍຕົນເອງ ນອກຈາກສິ່ງທີ່ໄດ້ເຫັນພຣະບິດາເຮັດ,
ບໍ່ວ່າພຣະບິດາກຳລັງເຮັດສິ່ງໃດ, ພຣະບຸດກໍເຮັດສິ່ງເຫລົ່ານັ້ນດ້ວຍ.[20]ເພາະວ່າພຣະບິດາຊົງຮັກພຣະບຸດແລະສຳແດງທຸກສິ່ງທີ່ພຣະ-
ອົງເຮັດໃຫ້ພຣະບຸດເຫັນ, ແລະພຣະບິດາຈະຊົງສຳແດງສິ່ງທີ່ຍິ່ງໃຫຍ່ກວ່ານີ້ແກ່ພຣະບຸດ ເພື່ອທີ່ທ່ານທັງຫລາຍຈະໄດ້ອັດສະຈັນໃຈ.
[21]ເພາະພຣະບິດາຊົງບັນດານໃຫ້ຄົນຕາຍເປັນຄືນແລະໃຫ້ຊີວິດແກ່ພວກເຂົາສັນໃດ, ພຣະບຸດກໍໃຫ້ຊີວິດແກ່ຜູ້ທີ່ພຣະອົງປາຖນາສັນນັ້ນ.[22]ດ້ວຍ-
ວ່າພຣະບິດາບໍ່ໄດ້ພິພາກສາຜູ້ໃດ, ແຕ່ໄດ້ມອບການພິພາກສາທັງໝົດນັ້ນໄວ້ແກ່ພຣະບຸດ,[23]ເພື່ອທຸກຄົນຈະໄດ້ໃຫ້ກຽດແດ່ພຣະບຸດນັ້ນ
ເໝືອນຢ່າງທີ່ພວກເຂົາໃຫ້ກຽດພຣະບິດາ. ແຕ່ຜູ້ໃດບໍ່ຖວາຍກຽດແດ່ພຣະບຸດ ກໍບໍ່ຖວາຍກຽດພຣະບິດາຜູ້ສົ່ງພຣະບຸດມາດ້ວຍ.
[24]ເຮົາບອກຄວາມຈິງແກ່ທ່ານວ່າ, ຜູ້ໃດທີ່ຍິນຄຳຂອງເຮົາແລະເຊື່ອທ່ານຜູ້ນັ້ນທີ່ສົ່ງເຮົາມາມີຊີວິດອັນຕະຫລອດໄປເປັນນິດ
ແລະບໍ່ເຂົ້າໃນການລົງໂທດ, ແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ.
[25]ເຮົາບອກຄວາມຈິງແກ່ທ່ານວ່າ, ເວລານັ້ນໃກ້ຈະເຖິງ ແລະບັດນີ້ກໍມາເຖິງແລ້ວ ເມື່ອຄົນຕາຍໄດ້ຍິນສຽງແຫ່ງພຣະບຸດຂອງພຣະເຈົ້າ
ແລະຄົນເຫລົ່ານັ້ນທີ່ໄດ້ຍິນຈະມີຊີວິດ.
[26]ເພາະວ່າໃນພຣະບິດານັ້ນຊົງມີຊີວິດໃນພຣະຊົນພຣະອົງຢ່າງໃດ, ພຣະອົງໄດ້ປຣະທານຊີວິດນັ້ນແກ່ພຣະບຸດ
ເພື່ອໃຫ້ຊີວິດນັ້ນຢູ່ໃນພຣະບຸດຢ່າງນັ້ນ,[27]ແລະພຣະບິດາໄດ້ໃຫ້ສິດອຳນາດແກ່ພຣະບຸດເພື່ອເຮັດການພິພາກສານັ້ນ ເພາະພຣະ-
ອົງຊົງເປັນບຸດມະນຸດ.
[28]ຢ່າປະຫລາດໃຈໃນເລື່ອງນີ້, ເພາະເວລານັ້ນຈະມາເຖິງ ເມື່ອທຸກຄົນທີ່ຢູ່ໃນຂຸມຝັງສົບຈະໄດ້ຍິນສຽງຂອງພຣະອົງ,[29]ແລະຈະອອກມາ:
ສຳລັບຄົນເຫລົ່ານັ້ນທີ່ໄດ້ເຮັດການດີກໍຈະໄດ້ຟື້ນຄືນສູ່ຊີວິດ, ແຕ່ຄົນທີ່ໄດ້ເຮັດຄວາມຊົ່ວຮ້າຍຈະຄືນສູ່ການພິພາກສາລົງໂທດ.
[30]ເຮົາບໍ່ໄດ້ເຮັດດ້ວຍຕົວເຮົາເອງ. ເຮົາໄດ້ຍິນຢ່າງໃດ, ເຮົາພິພາກສາຕາມນັ້ນ ແລະການພິພາກສາຂອງເຮົາກໍຊອບທັມ
ເພາະວ່າເຮົາບໍ່ໄດ້ເຮັດຕາມນ້ຳໃຈຂອງເຮົາ ແຕ່ເຮົາເຮັດຕາມນ້ຳພຣະທັຍຂອງຜູ້ຊົງໃຊ້ເຮົາມາ.[31]ຫາກເຮົາເປັນພະຍານໃຫ້ຕົວເຮົາເອງ, ຄຳພະ-
ຍານຂອງເຮົານັ້ນກໍບໍ່ຈິງ.[32]ຈະມີອີກຜູ້ໜຶ່ງທີ່ມາເພື່ອເປັນພະຍານແກ່ເຮົາ, ແລະເຮົາຮູ້ວ່າຄຳພະຍານທີ່ເພິ່ນໄດ້ເວົ້າເຖິງເຮົາກໍເປັນຄວາມຈິງ.
[33]ພວກທ່ານໄດ້ສົ່ງຄົນໄປຫາໂຢຮັນ, ແລະເພິ່ນໄດ້ຢືນຢັນຄວາມຈິງນີ້ແລ້ວ.[34]ແຕ່ຄຳພະຍານທີ່ເຮົາໄດ້ຮັບນັ້ນບໍ່ໄດ້ມາຈາກມະນຸດ,
ເຮົາກ່າວຢ່າງນີ້ເພື່ອທີ່ທ່ານຈະໄດ້ລອດ.[35]ໂຢຮັນເປັນໂຄມທີ່ໄຕ້ໄວ້ແລະສ່ອງສະຫວ່າງຢູ່, ແລະທ່ານເອງກໍໄດ້ຊື່ນຊົມຍິນດີໃນຄວາມສະ-
ຫວ່າງນັ້ນຊົ່ວຂະນະຫນຶ່ງ.
[36]ແຕ່ຄຳພະຍານທີ່ເຮົາມີນັ້ນກໍຍິ່ງໃຫຍ່ກວ່າຄຳພະຍານຂອງໂຢຮັນ, ເພາະການງານທີ່ພຣະບິດາໄດ້ມອບຫມາຍໃຫ້ເຮົາເຮັດໃຫ້ສຳເລັດທຸກຢ່າງ,
ທີ່ເຮົາໄດ້ເຮັດກໍໄດ້ເປັນພະຍານເຖິງເຮົາ, ແລະເປັນພະຍານວ່າພຣະບິດາໄດ້ສົ່ງເຮົາມາ.[37]ພຣະບິດາຜູ້ສົ່ງເຮົາມາໄດ້ເປັນພະຍານໃຫ້ແກ່ເຮົາ,
ພວກທ່ານເອງບໍ່ໄດ້ຍິນສຽງຫລືເຫັນພຣະອົງເລີຍ.[38]ພວກທ່ານບໍ່ມີຄຳຂອງພຣະອົງຢູ່ໃນຕົວຂອງພວກທ່ານ, ເພາະ-
ພວກທ່ານບໍ່ໄດ້ເຊື່ອໃນທ່ານຜູ້ນັ້ນທີ່ຖືກສົ່ງມາ.
[39]ທ່ານຄົ້ນຫາໃນຂໍ້ພຣະທັມຄຳພີ ເພາະທ່ານຄຶດວ່າໃນຂໍ້ພຣະທັມຄຳພີນັ້ນມີຊີວິດອັນຕະຫລອດໄປເປັນນິດ, ແລະຂໍ້ພຣະຄັມພີນີ້ກໍໄດ້ເປັນພະ-
ຍານໃຫ້ແກ່ເຮົາ.[40]ແລະທ່ານກໍບໍ່ຢາກມາຫາເຮົາເພື່ອທ່ານຈະໄດ້ມີຊີວິດ.
[41]ເຮົາບໍ່ໄດ້ຮັບການສັນຣະເສີນຈາກມະນຸດ.[42]ແຕ່ເຮົາຮູ້ວ່າທ່ານບໍ່ມີຄວາມຮັກຂອງພຣະເຈົ້າໃນຕົວທ່ານເອງ.
[43]ເຮົາໄດ້ມາໃນພຣະນາມພຣະບິດາຂອງເຮົາ, ແຕ່ພວກທ່ານກໍບໍ່ໄດ້ຮັບເຮົາ. ຫາກມີອີກຄົນມາໃນນາມຂອງພວກເຂົາເອງ, ທ່ານຈະຮັບຜູ້ນັ້ນໄວ້.
[44]ທ່ານຈະເຊື່ອໄດ້ຢ່າງໃດ, ເພາະພວກທ່ານສັນຣະເສີນກັນເອງ, ແຕ່ບໍ່ໄດ້ສະແຫວງຫາການສັນຣະເສີນ ທີ່ມາຈາກພຣະເຈົ້າແຕ່ພຽງອົງດຽວ?
[45]ຢ່າຫາວ່າເຮົາໄດ້ກ່າວໂທດພວກທ່ານຕໍ່ພຣະບິດາ. ຄົນທີ່ກ່າວໂທດພວກທ່ານຄືໂມເຊ, ຄົນທີ່ທ່ານມອບຄວາມຫວັງໄວ້ກັບເຂົາ.
[46]ຫາກທ່ານເຊື່ອໂມເຊ, ພວກທ່ານກໍຈະເຊື່ອເຮົາດ້ວຍ, ເພາະໂມເຊໄດ້ຂຽນກ່ຽວກັບເຮົາ.[47]ຫາກທ່ານບໍ່ເຊື່ອສິ່ງທີ່ໂມເຊຂຽນໄວ້,
ແລ້ວພວກທ່ານຈະເຊື່ອຖ້ອຍຄຳຂອງເຮົາໄດ້ຢ່າງໃດ?”

6 [1]ຫລັງຈາກນັ້ນສິ່ງເຫລົ່ານີ້, ພຣະເຢຊູໄດ້ສະເດັດຂ້ວາມໄປອີກຟາກຂອງທະເລສາບຄາລີເລ ຫລືທີ່ເອີ້ນອີກຊື່ໜຶ່ງວ່າທະເລສາບຕີເບເຣັຽ.
[2]ມີຝູງປະຊາຊົນເປັນຈຳນວນຫລວງຫລາຍຕິດຕາມພຣະອົງ, ເພາະເຂົາໄດ້ເຫັນໝາຍສຳຄັນທີ່ພຣະ-
ອົງຊົງເຮັດໃຫ້ແກ່ຄົນເຈັບປ່ວຍເຫລົ່ານັ້ນ.[3]ພຣະເຢຊູໄດ້ສະເດັດຂຶ້ນໄປຍັງພູແລະນັ່ງລົງກັບພວກສາວົກຂອງພຣະອົງ.

[4](ໃນຊ່ວງເວລານັ້ນເປັນເທສະການປັດສະຄາ, ແລະເທສະການຂອງຄົນຢິວແລ້ວ).[5]ເມື່ອພຣະເຢຊູຊົງເງີຍຫນ້າຂຶ້ນເບິ່ງເຫັນຄົນເປັນຈຳ-
ນວນຫລວງຫລາຍກຳລັງມາຫາພຣະອົງ, ພຣະອົງຊົງກ່າວກັບຟີລິບວ່າ, “ເຮົາຈະຊື້ອາຫານທີ່ໃດໃຫ້ຄົນເຫລົ່ານີ້ກິນ?”[6](ພຣະ-
ອົງກ່າວຢ່າງນີ້ເພື່ອລອງໃຈຟີລິບ, ແຕ່ພຣະອົງຊົງຮູ້ຢູ່ແລ້ວວ່າພຣະອົງຈະເຮັດອັນໃດ).
[7]ຟີລິບຕອບພຣະອົງວ່າ, “ສອງຮ້ອຍເດນາຣີອົນກໍບໍ່ພໍຊື້ອາຫານໃຫ້ພວກເຂົາກິນແມ້ນແຕ່ຜູ້ລະເລັກລະຫນ້ອຍ.”[8]ສາວົກຄົນຫນຶ່ງຊື່ອັນເດອາ
ນ້ອງຊາຍຂອງຊີໂມນເປໂຕ, ໄດ້ທູນພຣະອົງວ່າ,[9]“ມີເດັກນ້ອຍຄົນຫນຶ່ງມີເຂົ້າ-
ຈີເຮັດດ້ວຍເຂົ້າຟ່າງຫ້າກ້ອນກັບປາສອງໂຕ, ແຕ່ຈະພໍກັບຄົນຫລວງຫລາຍປານນີ້ໄດ້ຢ່າງໃດ?”
[10]ພຣະເຢຊູສັ່ງວ່າ, “ໃຫ້ຄົນເຫລົ່ານັ້ນນັ່ງລົງ” (ທີ່ນັ້ນມີຫຍ້າຫລາຍ) ພວກຜູ້ຊາຍຈຶ່ງນັ່ງລົງ, ມີປະມານຫ້າພັນຄົນ.[11]ແລ້ວພຣະເຢຊູກໍຈັບເຂົ້າ-
ຈີແລະເມື່ອໂມທະນາຂອບພຣະຄຸນແລ້ວກໍແຈກແກ່ພວກຄົນທີ່ນັ່ງຢູ່ນັ້ນ ແລະກໍເຮັດຢ່າງດຽວກັນກັບປາດ້ວຍ,
ແຈກໃຫ້ພວກເຂົາຫລາຍຕາມທີ່ພວກເຂົາຕ້ອງການ.[12]ເມື່ອຄົນໄດ້ຮັບປະທານຈົນອີ່ມ ພຣະອົງບອກພວກສາວົກຂອງພຣະອົງວ່າ,
“ຈົ່ງເກັບເອົາເສດຕ່ອນເຂົ້າຈີ່ທີ່ເຫລືອ ເພື່ອບໍ່ໃຫ້ອັນໃດເສັຽເລີຍ.”
[13]ພວກເຂົາຈຶ່ງໄດ້ຮວບຮວມເສດເຂົ້າຈີ່ແລະລວມໄດ້ສິບສອງບຸງເຕັມຈາກເຂົ້າຈີ່ເຂົ້າຟ່າງຫ້າກ້ອນ ຊຶ່ງເປັນຕ່ອນເສດເຫລືອທີ່ທຸກຄົນໄດ້ກິນແລ້ວ.
[14]ຫລັງຈາກນັ້ນ ເມື່ອພວກເຂົາໄດ້ເຫັນຫມາຍສຳຄັນທີ່ພຣະອົງໄດ້ເຮັດ, ພວກເຂົາເວົ້າວ່າ, “ແທ້ຈິງແລ້ວ, ນີ້ຄືຜູ້ປະກາດພຣະ-
ທັມທີ່ຈະມາໃນໂລກນີ້.”[15]ເມື່ອພຣະເຢຊູຊາບວ່າ ພວກເຂົາກຳລັງຈະມາຫາແລະເພື່ອບັງຄັບໃຫ້ພຣະອົງເປັນກະສັດຂອງພວກເຂົາ, ພຣະ-
ອົງຈຶ່ງແຍກຕົວອອກໄປຍັງພູເຂົາແຕ່ພຽງຜູ້ດຽວ.
[16]ເມື່ອເຖິງເວລາແລງ, ພວກສາວົກຂອງພຣະອົງໄດ້ລົງໄປທີ່ທະເລ.[17]ພວກເຂົາຂຶ້ນເຮືອໄປ ເພື່ອຂ້ວາມຟາກໄປຍັງເມືອງກາເປນາອູມ.
ຕອນນັ້ນກໍມືດຫລາຍແລ້ວ, ແລະພຣະເຢຊູກໍຍັງບໍ່ໄດ້ມາຫາພວກເຂົາ.[18]ແລ້ວລົມກໍເລີ່ມພັດແຮງ, ແລະທະເລກໍມີຄື້ນແຮງຂຶ້ນ.
[19]ເມື່ອພວກເຂົາກຳລັງພາຍເຮືອໄປໄດ້ປະມານຫ້າກິໂລ, ພວກເຂົາເຫັນພຣະເຢຊູກຳລັງຍ່າງມາເທິງທະເລແລະມາໃກ້ເຮືອຫລາຍຂຶ້ນ,
ແລະພວກເຂົາກໍເລີ່ມຢ້ານ.[20]ແຕ່ພຣະອົງກ່າວບອກກັບເຂົາວ່າ, “ແມ່ນເຮົາເອງ! ຢ່າຢ້ານເລີຍ.”[21]ແລ້ວພວກເຂົາກໍຍິນດີຮັບພຣະອົງຂຶ້ນເທິງເຮືອ,
ແລະທັນໃດນັ້ນເຮືອຂອງພວກເຂົາກໍມາເຖິງເມືອງທີ່ພວກເຂົາກຳລັງຈະໄປ.
[22]ວັນຕໍ່ມາ, ປະຊາຊົນທີ່ໄດ້ຢືນຄອຍຖ້າຢູ່ຟາກຂອງອີກທະເລເຫັນວ່າບໍ່ມີເຮືອລຳອື່ນ, ນອກຈາກລຳທີ່ຢູ່ທີ່ນັ້ນ ແຕ່ພຣະເຢຊູບໍ່ໄດ້ສະ-
ເດັດລົງເຮືອລຳນັ້ນໄປກັບພວກສາວົກ ມີແຕ່ພວກສາວົກຂອງພຣະອົງໄປເທົ່ານັ້ນ.[23]ແຕ່ກໍມີເຮືອລຳອື່ນຈາກເມືອງຕີເບ-
ເຣັຽມາຈອດໃກ້ບ່ອນທີ່ເຂົາໄດ້ກິນເຂົ້າຈີ່ ຫລັງຈາກທີ່ອົງພຣະຜູ້ເປັນເຈົ້າໄດ້ຊົງຂອບພຣະຄຸນ.
[24]ເມື່ອຝູງປະຊາຊົນເຫັນວ່າພຣະເຢຊູແລະພວກສາວົກຂອງພຣະອົງບໍ່ໄດ້ຢູ່ທີ່ນັ້ນ, ພວກເຂົາຈຶ່ງຂຶ້ນເຮືອແລະໄປຍັງເມືອງ ກາເປນາອູມ
ເພື່ອຊອກຫາພຣະເຢຊູ.[25]ເມື່ອພວກເຂົາພົບພຣະອົງອີກຟາກຂອງທະເລສາບ, ພວກເຂົາທູນພຣະອົງວ່າ, “ຣັບບີ, ທ່ານມາທີ່ນີ້ເມື່ອໃດ?”
[26]ພຣະເຢຊູຕອບພວກເຂົາວ່າ, “ເຮົາບອກຄວາມຈິງແກ່ທ່ານວ່າ, ທ່ານຊອກຫາເຮົາ ບໍ່ແມ່ນຍ້ອນພວກທ່ານໄດ້ເຫັນຫມາຍສຳຄັນ
ແຕ່ເພາະພວກທ່ານໄດ້ກິນເຂົ້າຈີ່ຈົນອີ່ມ.[27]ຢ່າເຮັດວຽກເພື່ອອາຫານທີ່ເສື່ອມສູນໄດ້, ແຕ່ຈົ່ງເຮັດວຽກເພື່ອທີ່ຈະໄດ້ອາຫານ
ທີ່ຕັ້ງຫມັ້ນຈົນເຖິງຊີວິດນິຣັນດອນ ທີ່ບຸດມະນຸດຈະໃຫ້ແກ່ທ່ານ, ເພາະວ່າພຣະເຈົ້າພຣະບິດາ ໄດ້ປຣະທັບຕາຫມາຍພຣະບຸດແລ້ວ.”
[28]ພວກເຂົາຈຶ່ງທູນພຣະອົງວ່າ, “ພວກຂ້ານ້ອຍຈະຕ້ອງເຮັດປະການໃດ ຈຶ່ງຈະໄດ້ເຮັດວຽກງານຂອງພຣະເຈົ້າ?”[29]ພຣະອົງຕອບແກ່ພວກເຂົາວ່າ,
“ງານຂອງພຣະເຈົ້າຄື: ການທີ່ທ່ານເຊື່ອວາງໃຈໃນຜູ້ນັ້ນທີ່ພຣະອົງໄດ້ສົ່ງມາ.”
[30]ພວກເຂົາຈຶ່ງຖາມພຣະອົງວ່າ, “ແລ້ວພຣະອົງຈະເຮັດໝາຍສຳຄັນອັນໃດ ເພື່ອພວກຂ້ານ້ອຍຈະໄດ້ເຫັນແລະເຊື່ອໃນພຣະອົງ?
ທ່ານຈະເຮັດສິ່ງໃດແດ່?[31]ບັນພະບຸຣຸດຂອງພວກຂ້ານ້ອຍໄດ້ກິນມານາໃນປ່າ ດັ່ງຄຳທີ່ຂຽນໄວ້ວ່າ, ‘ທ່ານໄດ້ໃຫ້ພວກເຂົາກິນອາຫານຈາກສະ-
ຫວັນ.’”
[32]ແລ້ວພຣະເຢຊູຕອບພວກເຂົາວ່າ, “ເຮົາບອກຄວາມຈິງແກ່ທ່ານວ່າ, ບໍ່ແມ່ນໂມເຊທີ່ໃຫ້ອາຫານນັ້ນຈາກສະຫວັນ, ແຕ່ເປັນພຣະບິ-
ດາຂອງເຮົາທີ່ໃຫ້ອາຫານທີ່ແທ້ຈິງຈາກສະຫວັນແກ່ພວກທ່ານ.[33]ເພາະວ່າອາຫານຂອງພຣະເຈົ້ານັ້ນ ຄືຜູ້ທີ່ລົງມາຈາກສະຫວັນແລະໃຫ້ຊີ-
ວິດແກ່ໂລກນີ້.”[34]ເຂົາເວົ້າກັບພຣະອົງວ່າ, “ນາຍເຈົ້າເອີຍ, ໄດ້ໂຜດໃຫ້ອາຫານນີ້ແກ່ພວກຂ້າຕະລອດໄປ.”
[35]ພຣະເຢຊູບອກພວກເຂົາວ່າ, “ເຮົາເປັນອາຫານທິບແຫ່ງຊີວິດ, ຜູ້ທີ່ມາຫາເຮົາຈະບໍ່ຫິວ ແລະຜູ້ທີ່ເຊື່ອໃນເຮົາຈະບໍ່ກະຫາຍນ້ຳອີກເລີຍ.
[36]ແຕ່ເຮົາບອກທ່ານວ່າ, ທ່ານໄດ້ເຫັນເຮົາແລ້ວ ແລະທ່ານບໍ່ເຊື່ອເຮົາ.[37]ທຸກຄົນທີ່ພຣະບິດາໄດ້ມອບໃຫ້ກັບເຮົາຈະມາຫາເຮົາ
ແລະຜູ້ທີ່ມາຫາເຮົາ, ເຮົາຈະບໍ່ໂຍນເຂົາຖິ້ມອອກໄປ.
[38]ເພາະເຮົາໄດ້ລົງມາຈາກສະຫວັນ ບໍ່ໄດ້ມາເຮັດຕາມຄວາມປະສົງຂອງເຮົາເອງ, ແຕ່ເຮັດຕາມພຣະປະສົງຂອງຜູ້ຊົງໃຊ້ເຮົາມາ.
[39]ແລະນີ້ຄືພຣະປະສົງຂອງຜູ້ຊົງໃຊ້ເຮົາມາ ເພື່ອຈະບໍ່ໃຫ້ຄົນທັງປວງທີ່ມອບໄວ້ກັບເຮົາສູນຫາຍແມ້ແຕ່ຄົນດຽວ
ແລ້ວພວກເຂົາຈະເປັນຄືນມາໃນວັນສຸດທ້າຍ.[40]ແລະນີ້ຄືພຣະປະສົງຂອງພຣະບິດາຂອງເຮົາ, ແລະທຸກຄົນທີ່ເຫັນພຣະບຸດ ແລະເຊື່ອໃນພຣະ-
ບຸດນັ້ນ ຈະໄດ້ມີຊີວິດອັນຕະຫລອດໄປເປັນນິດ ແລະເຮົາຈະໃຫ້ຜູ້ນັ້ນເປັນຄືນມາໃນວັນສຸດທ້າຍ.”
[41]ແລ້ວພວກຄົນຢິວກໍເລີ່ມຈົ່ມພຣະອົງທີ່ພຣະອົງໄດ້ເວົ້າວ່າ, “ເຮົາເປັນອາຫານທິບທີ່ໄດ້ລົງມາຈາກສະຫວັນ.”[42]ພວກເຂົາກ່າວວ່າ,
“ນີ້ບໍ່ແມ່ນເຢຊູ ລູກຂອງໂຢເຊັບຫລື, ພໍ່ແມ່ຂອງລາວເຮົາກໍຮູ້ຈັກ? ເຫດໃດຄົນນີ້ຈຶ່ງເວົ້າວ່າ 'ເຮົາໄດ້ລົງມາຈາກສະຫວັນ'?"
[43]ພຣະເຢຊູຊົງຕອບພວກເຂົາວ່າ, “ເຊົາຈົ່ມຖ່າມກາງພວກທ່ານເທາະ.[44]ບໍ່ມີຜູ້ໃດມາຫາເຮົາໄດ້, ຫາກພຣະບິ-
ດາຜູ້ຊົງໃຊ້ເຮົາມາບໍ່ໄດ້ນຳຄົນນັ້ນມາ ແລະເຮົາຈະໃຫ້ຜູ້ນັ້ນເປັນຄືນມາໃນວັນສຸດທ້າຍ.[45]ມີຜູ້ປະກາດພຣະທັມຂຽນໄວ້ວ່າ
‘ພຣະເຈົ້າຈະສັ່ງສອນພວກເຂົາທຸກຄົນ’ ທຸກຄົນທີ່ໄດ້ຍິນແລະຮຽນຈາກພຣະເຈົ້າກໍມາເຖິງເຮົາ.
[46]ບໍ່ມີຜູ້ໃຜໄດ້ເຫັນພຣະບິດາ ນອກຈາກຜູ້ທີ່ມາຈາກພຣະເຈົ້າ ຄືຜູ້ນັ້ນແຫລະທີ່ເຄີຍເຫັນພຣະບິດາ.[47]ເຮົາບອກຄວາມຈິງກັບທ່ານວ່າ,
ຜູ້ທີ່ເຊື່ອໃນເຮົາກໍມີຊີວິດອັນຕະຫລອດໄປເປັນນິດ.

48ເຮົາເປັນອາຫານທິບແຫ່ງຊີວິດ. 49ບັນພະບຸຣຸດຂອງທ່ານໄດ້ກິນມານາໃນປ່າ ແລະພວກເຂົາກໍຕາຍ.
50ນີ້ຄືອາຫານທີ່ລົງມາຈາກສະຫວັນ ເພື່ອຜູ້ນັ້ນທີ່ໄດ້ກິນແລ້ວຈະບໍ່ຕາຍ. 51ເຮົາເປັນອາຫານແຫ່ງຊີວິດທີ່ລົງມາຈາກສະຫວັນ, ຫາກໃຜໄດ້ກິນອາ-
ຫານນີ້, ຜູ້ນັ້ນຈະຢູ່ຕະລອດໄປເປັນນິດ. ອາຫານທີ່ເຮົາໃຫ້ແກ່ທ່ານນັ້ນຄືເນື້ອໜັງຂອງເຮົາເພື່ອຊີວິດຂອງໂລກນີ້.”
52ຄົນຢິວທ່າມກາງພວກເຈົ້າກໍເລີ່ມໃຈຮ້າຍແລະໂຕ້ຖຽງວ່າ, “ຊາຍຄົນນີ້ຈະເອົາເນື້ອໜັງຂອງຕົນໃຫ້ເຮົາກິນໄດ້ຢ່າງໃດ?” 53ພຣະ-
ເຢຊູກ່າວແກ່ພວກເຂົາວ່າ, “ເຮົາບອກຄວາມຈິງກັບທ່ານວ່າ,
ນອກເສັຽຈາກທ່ານຈະກິນເນື້ອໜັງຂອງບຸດມະນຸດແລະດື່ມຈາກເລືອດຂອງພຣະອົງ, ທ່ານຈະບໍ່ມີຊີວິດໃນຕົວທ່ານເລີຍ.
54ຜູ້ທີ່ກິນເນື້ອໜັງຂອງເຮົາແລະດື່ມເລືອດຂອງເຮົາ ຈະມີຊີວິດອັນຕະຫລອດໄປເປັນນິດ, ແລະເຮົາຈະໃຫ້ເຂົາເປັນຄືນມາໃນວັນສຸດທ້າຍ.
55ເພາະເນື້ອໜັງຂອງເຮົາຄືອາຫານທີ່ແທ້ຈິງ, ແລະເລືອດຂອງເຮົາກໍເປັນຂອງດື່ມທີ່ແທ້ຈິງ. 56ຜູ້ທີ່ກິນເນື້ອໜັງຂອງເຮົາແລະດື່ມເລືອດຂອງເຮົາ
ກໍຈະຍັງຄົງໃນເຮົາແລະເຮົາຢູ່ໃນຜູ້ນັ້ນ.
57ພຣະບິດາຜູ້ຊົງພຣະຊົນຢູ່ໄດ້ໃຊ້ເຮົາມາ ແລະເຮົາມີຊີວິດຢູ່ເພາະພຣະບິດາສັນໃດ, ຜູ້ນັ້ນທີ່ກິນເຮົາ ຜູ້ນັ້ນຈະມີຊີວິດຢູ່ໃນເຮົາສັນນັ້ນດ້ວຍ.
58ນີ້ເປັນອາຫານຊຶ່ງລົງມາຈາກສະຫວັນ, ບໍ່ເໝືອນກັບອາຫານທີ່ພວກບັນພະບຸຣຸດຂອງທ່ານທັງຫລາຍໄດ້ກິນແລ້ວຕາຍໄປ ຜູ້ທີ່ກິນອາ-
ຫານນີ້ຈະມີຊີວິດສືບໄປ. 59ພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ໃນໂຮງທັມມະເທສະໜາ ໃນຂະນະທີ່ພຣະອົງຊົງສັ່ງສອນຢູ່ເມືອງກາເປນາອູມ.
60ເມື່ອພວກສາວົກຂອງພຣະອົງຫລາຍຄົນໄດ້ຍິນດັ່ງນັ້ນຈຶ່ງຖາມວ່າ, “ຄຳສອນນີ້ຍາກເຫລືອເກີນ
ໃຜຈະຮັບຟັງໄດ້?” 61ພຣະອົງຈຶ່ງກ່າວແກ່ພວກເຂົາວ່າ, “ເລື່ອງນີ້ໄດ້ເຮັດໃຫ້ພວກທ່ານສະດຸດໃຈຫລື?
62ແລ້ວຖ້າຫາກທ່ານໄດ້ເຫັນບຸດມະນຸດສະເດັດຂຶ້ນເມືອໄປຍັງບ່ອນທີ່ທ່ານຢູ່ແຕ່ກ່ອນໜ້ານີ້ລະ? 63ຄືພຣະວິນ-
ຍານທີ່ໃຫ້ຊີວິດ; ເນື້ອກາຍນັ້ນບໍ່ມີປະໂຫຍດອັນໃດ. ຄຳທີ່ເຮົາໄດ້ກ່າວແກ່ທ່ານນັ້ນຄືພຣະວິນຍານ ແລະຄຳເຫລົ່ານັ້ນເປັນຊີວິດ.
64ຍັງມີບາງຄົນໃນພວກເຈົ້າທີ່ບໍ່ເຊື່ອ.” ເພາະພຣະເຢຊູຊົງຮູ້ແຕ່ເດີມແລ້ວວ່າໃຜຜູ້ໃດທີ່ບໍ່ເຊື່ອ ແລະຄົນໃດທີ່ຈະທໍຣະຍົດຕໍ່ພຣະອົງດ້ວຍ. 65ພຣະ-
ອົງກ່າວວ່າ, “ເປັນເພາະເຫດນີ້, ເຮົາຈຶ່ງບອກທ່ານວ່າບໍ່ມີຜູ້ໃດຈະມາຫາເຮົາໄດ້ ນອກຈາກພຣະບິດາຈະປຣະທານຜູ້ນັ້ນມາ.”
66ດ້ວຍເຫດນີ້, ມີລູກສິດຫລາຍຄົນໄດ້ລະຖິ້ມພຣະອົງແລະບໍ່ຕິດຕາມພຣະອົງອີກ. 67ພຣະເຢຊູຈຶ່ງກ່າວກັບສາວົກສິບສອງຄົນວ່າ,
“ພວກທ່ານບໍ່ຄິດຢາກຖອຍຈາກເຮົາໄປດ້ວຍຫລື?” 68ຊີໂມນເປໂຕຕອບພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ມີໃຜທີ່ພວກຂ້າ-
ນ້ອຍຄວນຈະຕິດຕາມອີກຫລື? ພຣະອົງຊົງມີຖ້ອຍຄຳແຫ່ງຊີວິດອັນຕະຫລອດໄປເປັນນິດ. 69ແລະພວກຂ້າ-
ນ້ອຍໄດ້ເຊື່ອແລະມາຮູ້ວ່າພຣະອົງຊົງເປັນອົງບໍຣິສຸດຂອງພຣະເຈົ້າແຕ່ພຽງຜູ້ດຽວ.”
70ພຣະເຢຊູຊົງຕອບພວກເຂົາວ່າ, “ເຮົາໄດ້ເລືອກພວກທ່ານທັງສິບສອງຄົນໄວ້ບໍ່ແມ່ນຫລື, ແຕ່ໜຶ່ງໃນພວກທ່ານນັ້ນຄືມານຮ້າຍ?” 71ທີ່ພຣະ-
ອົງກ່າວໝາຍເຖິງຢູດາລູກຊາຍຂອງຊີໂມນອິສະກາຣີອົດ, ເພາະເຂົາຄືຄົນທີ່ເປັນໜຶ່ງໃນສິບສອງຄົນ ທີ່ຈະທໍຣະຍົດຕໍ່ພຣະເຢຊູ.


generated on Tue Jun 17 19:01:42 2025

7 [1]ຫລັງຈາກເຫດການເຫລົ່ານີ້ ພຣະເຢຊູໄດ້ສະເດັດໄປຍັງບ່ອນຕ່າງໆໃນແຂວງຄາລີເລ, ເພາະພຣະອົງບໍ່ປະສົງຈະໄປຍັງແຂວງຢູດາຍ,
ເພາະພວກຢິວຫາໂອກາດທີ່ຈະຂ້າພຣະອົງ.[2]ເທສະການຕັ້ງທັບອາສັຍຂອງຊາດຢິວແລ້ວກໍໃກ້ຈະເຖິງ.

[3]ພວກນ້ອງຊາຍຂອງພຣະອົງບອກກັບພຣະອົງວ່າ, “ທ່ານຈົ່ງອອກຈາກທີ່ນີ້ແລະໄປຍັງແຂວງຢູດາຍ ເພື່ອທີ່ພວກສາວົກຂອງທ່ານຈະໄດ້ເຫັນກິ-
ຈະການທີ່ທ່ານເຮັດ.[4]ບໍ່ຫ່ອນມີຜູ້ໃດເຮັດອັນໃດໃນທີ່ລັບຫາກຕົວຂອງເຂົາຢາກເປັນທີ່ປະກົດ, ຫາກທ່ານເຮັດການເຫລົ່ານີ້ ຈົ່ງສະ-
ແດງຕົວທ່ານຕໍ່ໂລກນີ້.”
[5]ແມ້ແຕ່ພວກນ້ອງຊາຍຂອງພຣະອົງກໍບໍ່ເຊື່ອໃນພຣະອົງ.[6]ພຣະເຢຊູຈຶ່ງເວົ້າກັບພວກເຂົາວ່າ, “ເວລາຂອງເຮົາຍັງບໍ່ເຖິງ ແຕ່ເວ-
ລາຂອງພວກເຈົ້ານັ້ນພ້ອມຢູ່ສະເໝີ.[7]ໂລກນີ້ຈະກຽດຊັງທ່ານບໍ່ໄດ້, ແຕ່ໂລກນີ້ຊັງເຮົາ ເພາະເຮົາໄດ້ເປັນພະ-
ຍານວ່າການງານຂອງໂລກນັ້ນຊົ່ວຮ້າຍ.
[8]ທ່ານຈົ່ງຂຶ້ນໄປງານເທສະການນັ້ນ ແຕ່ເຮົາຈະຍັງບໍ່ຂຶ້ນໄປງານເທສະການ ເພາະວ່າຍັງບໍ່ເຖິງກຳນົດເວລາຂອງເຮົາ.”[9]ເມື່ອພຣະອົງຊົງກ່າວດັ່ງ-
ນັ້ນແກ່ພວກເຂົາແລ້ວ ພຣະອົງກໍປະທັບຢູ່ທີ່ແຂວງຄາລີເລ.
[10]ເມື່ອພວກນ້ອງຊາຍຂອງພຣະອົງໄດ້ຂຶ້ນໄປຍັງງານເທສະການ, ພຣະອົງກໍສະເດັດໄປທີ່ງານເທສະການພາຍຫລັງຢ່າງລັບໆບໍ່ເປີດເຜີຍ.
[11]ພວກຢິວນັ້ນກຳລັງຊອກຫາພຣະອົງແລະວ່າ, “ຄົນຜູ້ນັ້ນຢູ່ໃສ?”
[12]ມີຫລາຍຄົນທ່າມກາງປະຊາຊົນກໍຊຸມກັນເຖິງເລື່ອງພຣະອົງ. ລາງຄົນເວົ້າວ່າ, “ຊາຍຄົນນີ້ເປັນຄົນດີ” ຄົນອື່ນວ່າ, “ບໍ່ແມ່ນ,
ເພິ່ນກຳລັງເຮັດໃຫ້ຜູ້ຄົນຫລົງຜິດໄປ.”[13]ແຕ່ກໍຍັງບໍ່ມີໃຜກ້າເວົ້າເຖິງພຣະອົງຢ່າງເປີດເຜີຍ ເພາະພວກເຂົາຢ້ານພວກຢິວ.
[14]ເມື່ອງານເທສະການຜ່ານແລ້ວເຄິ່ງໜຶ່ງ, ພຣະເຢຊູໄດ້ຂຶ້ນໄປຍັງພຣະວິຫານແລະເລີ່ມເທສະນາສັ່ງສອນ.[15]ແລ້ວພວກຢິວກໍເລີ່ມປະ-
ຫລາດໃຈເວົ້າກັນວ່າ, “ເປັນຫຍັງຊາຍຄົນນີ້ມີຄວາມຮູ້ຫລວງຫລາຍ? ລາວບໍ່ເຄີຍໄດ້ຮຽນມາກ່ອນແມ່ນບໍ?”[16]ພຣະເຢຊູຊົງຕອບພວກເຂົາວ່າ,
“ຄຳສອນນີ້ບໍ່ແມ່ນຂອງເຮົາ, ແຕ່ເປັນຂອງຜູ້ຊົງໃຊ້ເຮົາມາ.
[17]ຖ້າຫາກຜູ້ໃດຕ້ອງການທີ່ຈະເຮັດຕາມພຣະທັຍຂອງພຣະອົງ, ຜູ້ນັ້ນຈະຮູ້ຈັກຄຳສອນນີ້, ບໍ່ວ່າຄຳສອນນັ້ນມາຈາກພຣະເຈົ້າ
ຫລືມາຈາກສິ່ງທີ່ເຮົາເວົ້າໂດຍຕົວຂອງເຮົາເອງ.[18]ຜູ້ໃດກໍຕາມທີ່ເວົ້າສິ່ງທີ່ອອກມາຈາກຕົວຂອງຕົນເອງ, ຜູ້ນັ້ນກໍເວົ້າເພື່ອສະແຫວງກຽດສຳ-
ລັບຕົນເອງ, ແຕ່ຜູ້ທີ່ສະແຫວງກຽດໃຫ້ພຣະອົງຜູ້ຊົງໃຊ້ຕົນມາ ຜູ້ນັ້ນແຫລະຄືຄົນຈິງ, ແລະບໍ່ມີຄວາມອະທັມໃນຕົວເລີຍ.
[19]ໂມເຊບໍ່ໄດ້ໃຫ້ພຣະບັນຍັດແກ່ທ່ານຫລື? ແຕ່ບໍ່ມີຜູ້ໃດໃນພວກທ່ານເຮັດຕາມພຣະບັນຍັດນັ້ນໄດ້ເລີຍ.
ພວກທ່ານຊອກຫາເພື່ອຂ້າເຮົາເຮັດຫຍັງ?”[20]ປະຊາຊົນຕອບວ່າ, “ເຈົ້າມີຜີຮ້າຍສິງຢູ່. ແມ່ນໃຜຊອກຫາຈະຂ້າເຈົ້າ?”
[21]ພຣະເຢຊູຊົງຕອບພວກເຂົາວ່າ, “ເຮົາໄດ້ເຮັດກິຈະການອັນໜຶ່ງ ແລະພວກທ່ານກໍປະຫລາດໃຈເພາະເຫດການນັ້ນ.[22]ໂມ-
ເຊໄດ້ໃຫ້ພວກທ່ານເຂົ້າພິທີຕັດ (ບໍ່ແມ່ນວ່າສິ່ງນັ້ນມາຈາກໂມເຊ ແຕ່ມາຈາກບັນພະບຸຣຸດ) ແລະທ່ານກໍໃຫ້ຜູ້ຊາຍຮັບພິທີຕັດໃນວັນສະບາໂຕ.
[23]ຖ້າຊາຍຄົນໃດຮັບພິທີຕັດໃນວັນສະບາໂຕ ເພື່ອບໍ່ໃຫ້ພຣະບັນຍັດຂອງໂມເຊເສັຽໄປ,
ເປັນຫຍັງພວກທ່ານຈຶ່ງໃຈຮ້າຍທີ່ເຮົາໄດ້ຮັກສາຊາຍຄົນໜຶ່ງດີເປັນປົກກະຕິໃນວັນສະບາໂຕ?[24]ຢ່າຕັດສິນຕາມທີ່ເຫັນພາຍນອກ,
ແຕ່ຈົ່ງຕັດສິນຢ່າງຍຸດຕິທັມ.”
[25]ບາງຄົນໃນພວກເຂົາທີ່ມາຈາກນະຄອນເຢຣູຊາເລັມເລີ່ມເວົ້າວ່າ, “ບໍ່ແມ່ນຜູ້ນີ້ບໍທີ່ພວກເຂົາຊອກຫາເພື່ອຂ້າ?[26]ເບິ່ງແມ,
ເພິ່ນກຳລັງກ່າວຢ່າງເປີດເຜີຍ ແຕ່ບໍ່ມີໃຜເວົ້າຫຍັງກ່ຽວກັບທ່ານເລີຍ. ເປັນໄປບໍ່ໄດ້ທີ່ພວກຈົ້ານາຍທີ່ຮູ້ວ່າຊາຍຄົນນີ້ແມ່ນພຣະຄຣິດ,
ເປັນໄປໄດ້ຫລື?[27]ແຕ່ເຮົາຮູ້ວ່າທ່ານຄົນນີ້ມາແຕ່ໃສ, ແຕ່ເມື່ອພຣະຄຣິດສະເດັດມາ ຈະບໍ່ມີໃຜຮູ້ວ່າພຣະອົງມາແຕ່ໃສ?”
[28]ແລະພຣະເຢຊູປະກາດອອກມາຂະນະທີ່ກຳລັງສັ່ງສອນໃນພຣະວິຫານແລະເວົ້າວ່າ, “ທ່ານທັງສອງຮູ້ຈັກເຮົາ ແລະຮູ້ວ່າເຮົາມາແຕ່ໃສ,
ເຮົາບໍ່ໄດ້ມາໂດຍລຳພັງຂອງເຮົາເອງ ແຕ່ຜູ້ຊົງໃຊ້ເຮົາມານັ້ນສັດຈິງ, ແລະພວກທ່ານບໍ່ຮູ້ຈັກພຣະອົງ.[29]ເຮົາຮູ້ຈັກທ່ານຜູ້ນັ້ນ
ເພາະວ່າເຮົາມາຈາກທ່ານຜູ້ນັ້ນຊົງໃຊ້ເຮົາມາ.”
[30]ພວກເຂົາພະຍາຍາມທີ່ຈະຈັບພຣະອົງ, ແຕ່ວ່າບໍ່ມີຜູ້ໃດກ້າຍື່ນມືແຕະຕ້ອງພຣະອົງ ເພາະວ່າເວລາຂອງພຣະອົງຍັງບໍ່ມາເຖິງ.[31]ແຕ່ມີປະຊາ-
ຊົນຫລາຍຄົນເຊື່ອໃນພຣະອົງ ພວກເຂົາເວົ້າວ່າ, “ເມື່ອພຣະຄຣິດ ສະເດັດມາ, ທ່ານຈະເຮັດໝາຍສຳຄັນຫລາຍກວ່າຜູ້ນີ້ຫລື?”[32]ພວກຟາຣີ-
ຊາຍໄດ້ຍິນປະຊາຊົນກຳລັງຊຸມກັນເວົ້າເຖິງເລື່ອງພຣະເຢຊູ, ແລະພວກປະໂລຫິດຕົນໃຫຍ່ແລະພວກຟາຣີຊາຍໄດ້ໃຊ້ເຈົ້າໜ້າທີ່ໄປຈັບພຣະອົງ.
[33]ແລ້ວພຣະເຢຊູຈຶ່ງກ່າວວ່າ, “ເຮົາຈະຢູ່ກັບທ່ານອີກໜ້ອຍໜຶ່ງ ແລ້ວເຮົາຈະກັບໄປຫາຜູ້ຊົງໃຊ້ເຮົາມາ.
[34]ທ່ານຈະຊອກຫາເຮົາແຕ່ທ່ານຈະບໍ່ພົບເຮົາ; ບ່ອນທີ່ເຮົາໄປນັ້ນ ພວກທ່ານໄປບໍ່ໄດ້.”
[35]ແລ້ວພວກຢິວຈຶ່ງເວົ້າກັນໃນກຸ່ມພວກເຂົາວ່າ, “ເພິ່ນຈະໄປໃສ ທີ່ເຮົາບໍ່ສາມາດໄປຫາລາວໄດ້? ເພິ່ນຈະເດີນທາງໄປຫາພວກຄົນທີ່ແຕກກະຈັດ-
ກະຈາຍໄປຢູ່ໃນຄົນຕ່າງຊາດເພື່ອສອນຄົນຕ່າງຊາດຫລື?[36]ຄຳນີ້ເປັນຢ່າງໃດໝໍທີ່ເພິ່ນກ່າວວ່າ ‘ທ່ານຈະຊອກຫາເຮົາແຕ່ຈະບໍ່ພົບເຮົາ,
ບ່ອນເຮົາຢູ່ນັ້ນທ່ານຈະເຂົ້າໄປບໍ່ໄດ້’?”
[37]ເມື່ອມາເຖິງວັນສຸດທ້າຍ ຄືວັນທີ່ຍິ່ງໃຫຍ່ຂອງເທສະການ, ພຣະເຢຊູຊົງຢືນຂຶ້ນແລະປະກາດວ່າ, “ຖ້າຜູ້ໃດກະຫາຍ
ຈົ່ງໃຫ້ຜູ້ນັ້ນຈົ່ງມາຫາເຮົາແລະດື່ມ.[38]ຜູ້ທີ່ເຊື່ອໃນເຮົາເໝືອນທີ່ມີຄຳຂຽນໄວ້ວ່າ "ນ້ຳຂອງແມ່ນ້ຳອັນແຫ່ງຊີ-
ວິດຈະໄຫລອອກຈາກພາຍໃນຂອງເຂົາ.”
[39]ແຕ່ພຣະເຢຊູຊົງກ່າວຢ່າງນີ້ໝາຍເຖິງພຣະວິນຍານ, ຄົນເຫລົ່ານັ້ນທີ່ເຊື່ອໃນພຣະອົງຈະໄດ້ຮັບ; ແຕ່ພຣະວິຍານຍັງບໍ່ໄດ້ມອບໄວ້,
ເພາະວ່າພຣະເຢຊູຍັງບໍ່ໄດ້ຊົງຮັບສະຫງ່າຣາສີ.
[40]ປະຊາຊົນບາງຄົນ ເມື່ອພວກເຂົາໄດ້ຍິນສິ່ງເຫລົ່ານີ້ກໍເວົ້າວ່າ, “ນີ້ເປັນຜູ້ປະກາດພຣະທັມ.”[41]ຄົນອື່ນເວົ້າວ່າ, “ນີ້ແມ່ນພຣະຄຣິດ”
ແຕ່ບາງຄົນເວົ້າວ່າ, “ພຣະຄຣິດມາຈາກຄາລີເລບໍ່ແມ່ນຫລື?[42]ພຣະຄັມພີບໍ່ໄດ້ກ່າວເອົາໄວ້ຫລືວ່າພຣະຄຣິດນັ້ນຈະມາຈາກເຊື້ອວົງຂອງດາ-
ວິດແລະມາຈາກບ້ານເບັດເລເຮັມ ຄືບ້ານທີ່ດາວິດເຄີຍຢູ່?
[43]ກໍເກີດການແບ່ງແຍກໃນບັນດາປະຊາຊົນເພາະພຣະອົງ.[44]ບາງຄົນຢາກຈະຈັບພຣະອົງ, ແຕ່ບໍ່ມີໃຜກ້າຍື່ນມືຈັບພຣະອົງ.
[45]ແລ້ວພວກເຈົ້າໜ້າທີ່ຈຶ່ງກັບໄປຫາພວກປະໂລຫິດຕົນໃຫຍ່ແລະພວກຟາຣີຊາຍ ແລະພວກນັ້ນໄດ້ຖາມເຈົ້າໜ້າທີ່ວ່າ,
“ເປັນຫຍັງຈຶ່ງບໍ່ຈັບມັນມາ?”[46]ເຈົ້າໜ້າທີ່ຕອບວ່າ, “ບໍ່ເຄີຍມີຜູ້ໃດເວົ້າຢ່າງນີ້ມາກ່ອນເລີຍ.”


generated on Tue Jun 17 19:01:42 2025

[47]ແລ້ວພວກຟາຣີຊາຍຕອບພວກເຂົາວ່າ, “ພວກເຈົ້າເອງກໍຖືກຊັກຫລອກເໝືອນກັນຫລື?[48]ມີພວກເຈົ້ານາຍຫລືພວກຟາຣີ-
ຊາຍຄົນໃດທີ່ເຊື່ອຄົນນັ້ນແດ່?[49]ແຕ່ປະຊາຊົນໝູ່ນີ້ບໍ່ຮູ້ຈັກພຣະບັນຍັດ ພວກເຂົາຖືກສາບແຊ່ງ.”
[50]ນີໂກເດມ (ໜຶ່ງໃນພວກຟາຣີຊາຍຕົນໃຫຍ່, ຜູ້ທີ່ໄດ້ມາຫາພຣະອົງຄາວກ່ອນນີ້) ບອກພວກເຂົາວ່າ,
[51]“ກົດໝາຍຂອງເຮົານັ້ນຈະຕັດສິນຄົນໃດກ່ອນທີ່ຈະໄດ້ຍິນຈາກເຂົາແລະຮູ້ວ່າເຂົາໄດ້ເຮັດອັນໃດຫລື?”[52]ພວກເຂົາກໍຕອບທ່ານວ່າ,
“ທ່ານມາຈາກຄາລີເລດ້ວຍຫລື? ລອງໄປຫາເບິ່ງແລະທ່ານຈະຮູ້ວ່າບໍ່ມີຜູ້ປະກາດພຣະທັມຈັກຄົນມາຈາກຄາລີເລເລີຍ.”
[53][ແລ້ວພວກເຂົາກໍກັບໄປຍັງເຮືອນຂອງຕົນເອງ].


generated on Tue Jun 17 19:01:42 2025

8 [1]ພຣະເຢຊູໄດ້ສະເດັດໄປຍັງພູໝາກກອກເທດ.[2]ໃນເວລາຮຸ່ງເຊົ້າ ພຣະອົງໄດ້ສະເດັດມາສັ່ງສອນທີ່ພຣະວິຫານອີກຄັ້ງ,
ແລະຄົນທັງປວງກໍມາຫາພຣະອົງ; ພຣະອົງນັ່ງລົງ ແລະ ສັ່ງສອນພວກເຂົາ.[3]ພວກນັກທັມແລະພວກຟາຣີຊາຍ
ໄດ້ພາຜູ້ຍິງຄົນໜຶ່ງທີ່ເຮັດຜິດຂໍ້ຫາຫລິ້ນຊູ້. ພວກເຂົາໄດ້ໃຫ້ຍິງນັ້ນຢືນຢູ່ຖ້າມກາງຝູງຊົນ.

[4]ພວກເຂົາທູນພຣະອົງວ່າ, "ອາຈານເຈົ້າເອີຍ, ຍິງຄົນນີ້ຖືກຈັບເມື່ອກຳລັງຫລິ້ນຊູ້ຢູ່.[5]ໃນພຣະບັນຍັດໂມເຊສັ່ງໃຫ້ເອົາຫີນຄວ່າງໃສ່ຄົນຢ່າງນີ້;
ທ່ານເດຈະວ່າຢ່າງໃດກັບຍິງຄົນນີ້?"[6]ພວກເຂົາເວົ້າຢ່າງນີ້ເພື່ອທົດລອງໃຫ້ພຣະອົງເຮັດຜິດເພື່ອຈະໄດ້ຫາເຫດຟ້ອງພຣະອົງ, ແຕ່ພຣະ-
ເຢຊູຊົງນ້ອມພຣະກາຍລົງແລະໃຊ້ນີ້ວພຣະຫັດຂຽນທີ່ດິນ.
[7]ເມື່ອພວກເຂົາຍັງຄົງຖາມພຣະອົງອີກ, ພຣະອົງຊົງຢືນຂຶ້ນແລະກ່າວແກ່ເຂົາວ່າ, "ຜູ້ໃດໃນພວກເຈົ້າທີ່ບໍ່ມີຜິດບາບ
ກໍໃຫ້ຜູ້ນັ້ນເອົາຫີນຄວ່າງໃສ່ຍິງນີ້ກ່ອນໝູ່."[8]ແລ້ວພຣະອົງກໍຊົງນ້ອມພຣະກາຍລົງອີກຄັ້ງ ແລະ ເອົານີ້ວຂອງພຣະອົງຂຽນທີ່ດິນ.
[9]ເມື່ອພວກເຂົາໄດ້ຍິນດັ່ງນັ້ນກໍເລີ່ມອອກໄປເທື່ອລະຄົນ, ເລີ່ມຕັ້ງແຕ່ຄົນແກ່ໄປ ຈົນໃນທີ່ສຸດກໍເຫລືອພຽງພຣະ-
ເຢຊູກັບຍິງຄົນນັ້ນທີ່ຖືກນຳມາໄວ້ຢູ່ເຄິ່ງກາງ.[10]ພຣະເຢຊູຊົງເງີຍຂຶ້ນແລະຖາມຍິງນັ້ນວ່າ, "ນາງເອີຍ, ຄົນທີ່ກ່າວຫາເຈົ້າໄປໃສໝົດແລ້ວ?
ບໍ່ມີໃຜລົງໂທດເຈົ້າຫລື?"[11]ນາງທູນຕອບວ່າ, "ບໍ່ມີໃຜເລີຍ, ພຣະອົງເຈົ້າ" ພຣະເຢຊູຊົງກ່າວວ່າ, "ເຮົາກໍບໍ່ລົງໂທດເຈົ້າເໝືອນກັນ,
ຈົ່ງໄປເສັຽເຖີດແລະຢ່າເຮັດຜິດອີກ."]
[12]ແລ້ວພຣະເຢຊູກ່າວກັບພວກເຂົາວ່າ, "ເຮົາເປັນຄວາມສະຫວ່າງຂອງໂລກ; ຜູ້ທີ່ຕາມເຮົາມາຈະບໍ່ຫຽວໄປໃນທີ່ມືດ ແຕ່ຈະມີຄວາມສະ-
ຫວ່າງແຫ່ງຊີວິດ."[13]ພວກຟາຣີຊາຍກ່າວຕໍ່ພຣະອົງວ່າ, "ທ່ານເປັນພະຍານໃຫ້ແກ່ຕົວທ່ານເອງ; ຄຳພະຍານຂອງທ່ານກໍບໍ່ຈິງ."
[14]ພຣະເຢຊູຊົງຕອບເຂົາວ່າ, "ເຖິງແມ່ນວ່າເຮົາເປັນພະຍານດ້ວຍຕົວຂອງເຮົາເອງ, ຄຳພະຍານຂອງເຮົານັ້ນຈິງ,
ເຮົາຮູ້ວ່າເຮົາມາແຕ່ໃສແລະກຳລັງຈະໄປທີ່ໃດ, ແຕ່ພວກທ່ານບໍ່ຮູ້ວ່າເຮົາມາແຕ່ໃສແລະຈະໄປທີ່ໃດ.[15]ພວກທ່ານຕັດສິນຕາມເນື້ອໜັງ;
ແຕ່ເຮົາກໍບໍ່ຕັດສິນຜູ້ໃດເລີຍ.[16]ຖ້າຫາກເຮົາຕັດສິນ, ການຕັດສິນຂອງເຮົານັ້ນຈິງ, ເພາະວ່າບໍ່ໄດ້ມີເຮົາແຕ່ຜູ້ດຽວ, ແຕ່ເຮົາມີພຣະບິ-
ດາທີ່ຊົງໃຊ້ເຮົາມາດ້ວຍ.
[17]ແມ່ນແລ້ວ ໃນກົດໝາຍຂອງທ່ານຂຽນໄວ້ວ່າ ຄຳພະຍານຂອງຄົນສອງຄົນກໍເປັນຄວາມຈິງ.[18]ເຮົາຄືຄົນນັ້ນທີ່ໄດ້ເປັນພະຍານເຖິງຕົວເຮົາເອງ,
ແລະພຣະບິດາທີ່ຊົງໃຊ້ເຮົາມາກໍເປັນພະຍານເຖິງເຮົາ."
[19]ພວກເຂົາຈຶ່ງທູນກັບພຣະອົງວ່າ, "ພຣະບິດາຂອງທ່ານຢູ່ໃສ?" ພຣະເຢຊູຕອບວ່າ, "ທ່ານບໍ່ຮູ້ຈັກເຮົາຫລືພຣະບິດາຂອງເຮົາ, ຖ້າທ່ານຮູ້ຈັກເຮົາ
ທ່ານກໍຮູ້ຈັກພຣະບິດາຂອງເຮົາເໝືອນກັນ.[20]ພຣະເຢຊູກ່າວຄຳເຫລົ່ານີ້ເປັນຄຳອຸປະມາໃນຂະນະທີ່ພຣະເຢຊູຊົງສັ່ງສອນໃນພຣະວິ-
ຫານແລະບໍ່ມີຜູ້ໃດຈັບພຣະອົງ ເພາະເວລາຂອງພຣະອົງຍັງບໍ່ເຖິງ.
[21]ອີກຄັ້ງໜຶ່ງ ພຣະອົງກ່າວກັບພວກເຂົາອີກວ່າ, "ເຮົາຈະຈາກໄປ ພວກທ່ານຈະຊອກຫາເຮົາ ແລະຈະຕາຍໃນຄວາມຜິດບາບຂອງທ່ານ.
ບ່ອນທີ່ເຮົາຈະໄປນັ້ນພວກທ່ານຈະໄປບໍ່ໄດ້."[22]ພວກຢິວເວົ້າກັນວ່າ, "ລາວຈະຂ້າຕົວເອງຫລື? ລາວກ່າວວ່າ
'ບ່ອນທີ່ເຮົາຈະໄປນັ້ນພວກທ່ານໄປບໍ່ໄດ້'?"
[23]ພຣະເຢຊູກ່າວກັບພວກເຂົາວ່າ, "ທ່ານມາຈາກເບື້ອງລຸ່ມ, ຝ່າຍເຮົາມາຈາກເບື້ອງເທິງ. ພວກທ່ານເປັນຂອງໂລກນີ້, ເຮົາບໍ່ເປັນຂອງໂລກນີ້.
[24]ດ້ວຍເຫດນັ້ນ, ເຮົາບອກທ່ານວ່າ ທ່ານຈະຕາຍໃນຄວາມຜິດບາບຂອງທ່ານ, ນອກເສັຽຈາກທ່ານໄດ້ເຊື່ອເຮົາວ່າເປັນຜູ້ນັ້ນ,
ທ່ານຈະຕາຍໃນບາບຂອງທ່ານ."
[25]ດັ່ງນັ້ນພວກເຂົາທູນຖາມພຣະອົງວ່າ, "ແລ້ວທ່ານເປັນໃຜ?" ພຣະເຢຊູຊົງຕອບກັບພວກເຂົາວ່າ, "ສິ່ງທີ່ເຮົາໄດ້ບອກທ່ານຕັ້ງແຕ່ຕົ້ນນັ້ນ.
[26]ເຮົາມີຫລາຍປະການທີ່ຈະກ່າວກ່ຽວກັບພວກທ່ານ ແລະຕັດສິນພວກທ່ານ, ຢ່າງໃດກໍຕາມຜູ້ຊົງໃຊ້ເຮົາມານັ້ນຈິງ,
ແລະສິ່ງທີ່ເຮົາໄດ້ຍິນຈາກທ່ານຜູ້ນັ້ນ ຄືສິ່ງເຫລົ່ານີ້ທີ່ເຮົາໄດ້ກ່າວແກ່ໂລກ."[27]ພວກເຂົາບໍ່ໄດ້ເຂົ້າໃຈວ່າພຣະອົງກຳລັງກ່າວກັບເຂົາເຖິງເລື່ອງພຣະ-
ບິດາ.
[28]ພຣະເຢຊູກ່າວວ່າ, "ເມື່ອທ່ານໄດ້ຍົກບຸດມະນຸດຂຶ້ນແລ້ວ, ທ່ານຈະຮູ້ວ່າເຮົາເປັນຜູ້ນັ້ນ, ແລະເຮົາບໍ່ໄດ້ເຮັດສິ່ງໃດດ້ວຍຕົວຂອງເຮົາ ທີ່ພຣະບິ-
ດາໄດ້ຊົງສອນເຮົາ, ເຮົາຈຶ່ງກ່າວສິ່ງເຫລົ່ານີ້.[29]ພຣະອົງຜູ້ຊົງໃຊ້ເຮົາມາກໍຊົງສະຖິດຢູ່ກັບເຮົາ, ແລະພຣະອົງບໍ່ໄດ້ຊົງປະເຮົາໄວ້ໃຫ້ຢູ່ຜູ້ດຽວ,
ເພາະວ່າເຮົາເຮັດທຸກສິ່ງທີ່ພຣະບິດາຊອບພຣະທັຍຢູ່ສະເໝີ."[30]ໃນຂະນະທີ່ພຣະອົງຊົງກ່າວຄຳເຫລົ່ານັ້ນ ຫລາຍຄົນໄດ້ເຊື່ອໃນພຣະອົງ.
[31]ພຣະເຢຊູກ່າວແກ່ພວກຢິວທີ່ເຊື່ອໃນພຣະອົງວ່າ, "ຖ້າພວກທ່ານຕັ້ງໝັ້ນຄົງຢູ່ໃນຖ້ອຍຄຳຂອງເຮົາ, ພວກທ່ານກໍເປັນສາ-
ວົກຂອງເຮົາຢ່າງແທ້ຈິງ.[32]ແລະທ່ານຈະຮູ້ຈັກຄວາມຈິງ, ແລະຄວາມຈິງນັ້ນຈະປົດປ່ອຍໃຫ້ພວກທ່ານເປັນອິສຣະ."[33]ພວກເຂົາຕອບພຣະອົງວ່າ,
"ເຮົາເປັນເຊື້ອສາຍຂອງອັບຣາຮາມ, ແລະເຮົາບໍ່ເຄີຍເປັນຂ້ອຍຂ້າຂອງຜູ້ໃດຈັກເທື່ອ, ເປັນຫຍັງທ່ານຈຶ່ງເວົ້າວ່າ, 'ທ່ານຈະເປັນອິສຣະ?'"
[34]ພຣະເຢຊູຕອບພວກເຂົາວ່າ, "ເຮົາບອກຄວາມຈິງແກ່ພວກທ່ານວ່າ, ຜູ້ໃດກໍຕາມທີ່ເຄີຍເຮັດການຜິດບາບກໍເປັນຂ້ອຍຂ້າຂອງຄວາມບາບ.
[35]ຂ້ອຍຂ້າບໍ່ຕັ້ງຢູ່ໃນຄົວເຮືອນຕະຫລອດໄປ, ແຕ່ບຸດກໍຕັ້ງຢູ່ຕະຫລອດໄປ.[36]ເຫດສັນນັ້ນ, ຖ້າພຣະບຸດຈະປົດປ່ອຍໃຫ້ທ່ານເປັນອິສຣະ,
ພວກທ່ານກໍຈະເປັນອິສຣະຢ່າງແທ້ຈິງ.
[37]ເຮົາຮູ້ຢູ່ວ່າທ່ານເປັນເຊື້ອສາຍຂອງອັບຣາຮາມ; ແຕ່ທ່ານຊອກຫາຈະຂ້າເຮົາ, ເພາະຖ້ອຍຄຳຂອງເຮົາບໍ່ໄດ້ຢູ່ໃນທ່ານ.
[38]ເຮົາເວົ້າໃນສິ່ງທີ່ເຮົາເຫັນໃນພຣະບິດາ ແລະທ່ານກໍເຮັດໃນສິ່ງທີ່ທ່ານເຫັນຈາກພຣະບິດາດ້ວຍ."
[39]ພວກເຂົາຕອບພຣະອົງວ່າ, "ພໍ່ຂອງພວກເຮົາຄືອັບຣາຮາມ" ພຣະເຢຊູກ່າວແກ່ພວກເຂົາວ່າ, "ຫາກທ່ານເປັນລູກຫລານຂອງອັບຣາ-
ຮາມແລ້ວ, ທ່ານກໍຈະເຮັດງານຂອງອັບຣາຮາມ.[40]ແຕ່ຕອນນີ້ທ່ານຫາທີ່ຈະຂ້າເຮົາ, ຄືຊາຍຄົນນັ້ນຜູ້ໄດ້ບອກຄວາມຈິງແກ່ທ່ານ
ຕາມທີ່ເຮົາໄດ້ຍິນມາຈາກພຣະບິດາ. ອັບຣາຮາມບໍ່ໄດ້ເຮັດເຊັ່ນນີ້.[41]ທ່ານຈຶ່ງເຮັດງານຂອງບິດາ" ພວກເຂົາຈຶ່ງທູນຕອບວ່າ,
"ເຮົາບໍ່ໄດ້ເກີດມາຈາກການຫລິ້ນຊູ້, ເຮົາມີບິດາອົງດຽວຄືພຣະເຈົ້າ."
[42]ພຣະເຢຊູບອກພວກເຂົາວ່າ, "ຖ້າພຣະເຈົ້າຊົງເປັນພຣະບິດາຂອງທ່ານ, ທ່ານຈະຮັກເຮົາ ເພາະເຮົາມາຈາກພຣະເຈົ້າແລະເຮົາຢູ່ທີ່ນີ້
ເພາະເຮົາບໍ່ໄດ້ມາດ້ວຍຕົວຂອງເຮົາເອງ ແຕ່ພຣະບິດາສົ່ງເຮົາມາ.[43]ເປັນຫຍັງທ່ານບໍ່ເຂົ້າໃຈຄຳເວົ້າຂອງເຮົາ?
ນັ້ນເປັນເພາະທ່ານບໍ່ໄດ້ຍິນຄຳຂອງເຮົາ.[44]ທ່ານມາຈາກພໍ່ຂອງທ່ານຄືມານ, ແລະພວກທ່ານມີໃຈຢາກເຮັດຕາມຄວາມປາຖນາຂອງພໍ່ທ່ານ.

 generated on Tue Jun 17 19:01:42 2025

ພໍ່ຂອງທ່ານເປັນຜູ້ຂ້າຄົນຕັ້ງແຕ່ເດີມມາແລ້ວ ແລະມັນບໍ່ໄດ້ຕັ້ງຢູ່ໃນຄວາມຈິງ, ເພາະວ່າໃນຕົວມັນບໍ່ມີຄວາມຈິງເລີຍ. ເມື່ອມັນເວົ້າຕົວະ
ມັນກໍເວົ້າຕາມທັມະຊາດຂອງມັນ, ເພາະມັນເປັນຜູ້ເວົ້າຕົວະແລະເປັນພໍ່ຂອງການຕົວະ.
[45]ແຕ່ເຮົາໄດ້ບອກຄວາມຈິງແກ່ພວກທ່ານ ແຕ່ພວກທ່ານບໍ່ໄດ້ເຊື່ອເຮົາ.[46]ຜູ້ໃດໃນພວກທ່ານທີ່ພົບຄວາມຜິດບາບໃນເຮົາ? ຖ້າເຮົາເວົ້າຄວາມຈິງ
ເປັນຫຍັງທ່ານຈຶ່ງບໍ່ເຊື່ອເຮົາ?[47]ຄົນທີ່ເປັນຂອງພຣະເຈົ້າກໍຈະຟັງຄຳຂອງພຣະເຈົ້າ, ທ່ານບໍ່ຟັງຄຳເຫລົ່ານັ້ນ ເພາະທ່ານບໍ່ໄດ້ເປັນຂອງພຣະເຈົ້າ.”
[48]ພວກຢິວຕອບພຣະອົງວ່າ, “ເຮົາບໍ່ໄດ້ບອກກັບທ່ານແທ້ໆບໍ່ວ່າ, ທ່ານເປັນໄທຊາມາເຣຍແລະມີຜີຮ້າຍ?”[49]ພຣະເຢຊູຕອບເຂົາວ່າ,
“ເຮົາບໍ່ມີມານຮ້າຍ ເຮົາຖວາຍກຽດແດ່ພຣະບິດາຂອງເຮົາ, ແຕ່ທ່ານບໍ່ໄດ້ໃຫ້ກຽດເຮົາ.
[50]ເຮົາບໍ່ໄດ້ຊອກຫາກຽດສຳລັບເຮົາເອງ, ແຕ່ມີຜູ້ໜຶ່ງທີ່ຊອກຫາກຽດແລະການພິພາກສາ.[51]ເຮົາບອກຄວາມຈິງແກ່ພວກທ່ານ
ຖ້າຫາກໃຜປະຕິບັດຕາມຄຳສອນຂອງເຮົາ, ຜູ້ນັ້ນຈະບໍ່ເຫັນຄວາມຕາຍ.”
[52]ພວກຢິວບອກພຣະອົງວ່າ, “ຕອນນີ້ເຮົາຮູ້ແລ້ວວ່າທ່ານມີມານຮ້າຍສິງຢູ່, ອັບຣາຮາມແລະພວກປະກາດພຣະທັມກໍຕາຍໄປໝົດແລ້ວ;
ແຕ່ທ່ານເວົ້າວ່າ ‘ຖ້າຜູ້ໃດປະຕິບັດຕາມຄຳສອນຂອງເຮົາຈະບໍ່ຕາຍ.’[53]ທ່ານບໍ່ຍິ່ງໃຫຍ່ກວ່າອັບຣາຮາມບິດາຂອງພວກເຮົາ
ທີ່ຕາຍໄປແລ້ວນັ້ນຫລື? ພວກຜູ້ປະກາດພຣະທັມກໍຕາຍແລ້ວເໝືອນກັນ. ແລ້ວທ່ານຈະອວດອ້າງວ່າທ່ານເປັນຜູ້ໃດນອກເໜືອຈາກຄົນເຫລົ່ານີ້?”
[54]ພຣະເຢຊູຕອບວ່າ, “ຖ້າເຮົາໃຫ້ກຽດແກ່ຕົວເຮົາເອງ, ກຽດຂອງເຮົາກໍບໍ່ມີຄ່າຫຍັງ; ຄືພຣະບິດາທີ່ໄດ້ໃຫ້ກຽດແກ່ເຮົາ
ແລະຄົນທີ່ທ່ານເວົ້ານັ້ນກໍຄືພຣະເຈົ້າຂອງພວກທ່ານ.[55]ພວກທ່ານບໍ່ຮູ້ຈັກພຣະອົງ ແຕ່ເຮົາຮູ້ຈັກທ່ານຜູ້ນັ້ນ, ຖ້າຫາກເຮົາຈະເວົ້າວ່າ 'ເຮົາບໍ່ຮູ້-
ຈັກທ່ານຜູ້ນັ້ນ' ເຮົາກໍເປັນຄົນທີ່ເວົ້າຕົວະ. ຢ່າງໃດກໍຕາມ, ເຮົາຮູ້ຈັກພຣະອົງແລະປະພຶດຕາມພຣະທັມຂອງພຣະອົງ.[56]ອັບຣາ-
ຮາມບິດາຂອງທ່ານຈະຊົມຊື່ນຍິນດີທີ່ໄດ້ເຫັນເຮົາ ໃນວັນນີ້ທ່ານໄດ້ເຫັນແລະຍິນດີ.”
[57]ພວກຢິວບອກກັບພຣະອົງວ່າ, “ທ່ານອາຍຸຍັງບໍ່ເຖິງຫ້າສິບປີ, ແຕ່ທ່ານໄດ້ເຫັນອັບຣາຮາມຫລື?”[58]ພຣະເຢຊູບອກກັບເຂົາວ່າ,
“ເຮົາບອກຄວາມຈິງກັບທ່ານວ່າ, ກ່ອນອັບຣາຮາມເກີດ ເຮົາຢູ່ທີ່ນັ້ນ.”[59]ພວກເຂົາເລີ່ມຈັບກ້ອນຫີນເພື່ອຈະຄວ່າງໃສ່ພຣະອົງ,
ແຕ່ພຣະອົງຫລົບໜີແລະອອກໄປຈາກພຣະວິຫານຢ່າງລັບໆ.

 generated on Tue Jun 17 19:01:42 2025

9 [1]ບັດນີ້ ຂະນະທີ່ພຣະເຢຊູກໍາລັງສະເດັດຜ່ານໄປ ພຣະອົງເຫັນຊາຍຄົນໜຶ່ງຕາບອດຕັ້ງແຕ່ເກີດ.[2]ພວກສາວົກຂອງພຣະອົງຖາມພຣະອົງວ່າ,
"ອາຈານເຈົ້າເອີຍ, ຜູ້ໃດໄດ້ເຮັດບາບ ຊາຍຄົນນີ້ຫລືພໍ່ແມ່ຂອງລາວ ທີ່ເຮັດໃຫ້ລາວເກີດມາຕາບອດ?"

[3]ພຣະເຢຊູຕອບວ່າ, "ບໍ່ແມ່ນຊາຍຄົນນີ້ຫລືພໍ່ແມ່ຂອງລາວໄດ້ເຮັດບາບ, ແຕ່ເພື່ອໃຫ້ພຣະຣາຊະກິດທັງສິ້ນຂອງພຣະ-
ເຈົ້າຈະໄດ້ເປີດເຜີຍໃນຕົວລາວ.[4]ພວກເຮົາຕ້ອງເຮັດພຣະຣາຊະກິດຂອງພຣະອົງຜູ້ຊົງໃຊ້ເຮົາມາ ໃນຂະນະທີ່ເປັນກາງເວັນຢູ່,
ເມື່ອເຖິງເວລາກາງຄືນກໍຈະບໍ່ມີຜູ້ໃດອາດເຮັດວຽກໄດ້.[5]ຂະນະທີ່ເຮົາຍັງຢູ່ໃນໂລກນີ້, ເຮົາເປັນຄວາມສະຫວ່າງຂອງໂລກ."
[6]ຫລັງຈາກທີ່ພຣະເຢຊູກ່າວສິ່ງເຫລົ່ານີ້, ພຣະອົງຖົ່ມນໍ້າລາຍລົງດິນ ໃຊ້ນໍ້າລາຍປະສົມດິນເປັນຕົມແລ້ວທາໃສ່ຕາຂອງຄົນຕາບອດ.
[7]ພຣະອົງກ່າວຕໍ່ຄົນນັ້ນວ່າ, "ຈົ່ງໄປລ້າງອອກທີ່ສະຊີໂລອາມ (ຊຶ່ງແປວ່າສົ່ງໄປ)" ຊາຍຄົນນັ້ນຈຶ່ງໄປລ້າງ ແລະກັບມາກໍເຫັນຮຸ່ງໄດ້.
[8]ຈາກນັ້ນເພື່ອນບ້ານຂອງຊາຍຄົນນັ້ນແລະບັນດາຄົນທີ່ເຄີຍເຫັນຊາຍຄົນນີ້ກ່ອນໜ້ານີ້ຕອນທີ່ລາວເປັນຄົນຂໍທານເວົ້າວ່າ,
"ຜູ້ນີ້ບໍ່ແມ່ນຄົນທີ່ເຄີຍນັ່ງຂໍທານນັ້ນຫລື?"[9]ບາງຄົນເວົ້າວ່າ, "ລາວແມ່ນຄົນນັ້ນ" ແຕ່ຄົນອື່ນກໍວ່າ, "ບໍ່ແມ່ນ ແຕ່ລາວເປັນຄືກັບຄົນນັ້ນ,"
ແຕ່ຊາຍຄົນນັ້ນເວົ້າວ່າ,"ແມ່ນຂ້າພຣະເຈົ້າເອງ."
[10]ພວກເຂົາເວົ້າກັບຄົນນັ້ນວ່າ, "ແລ້ວຕາຂອງເຈົ້າເຊົາບອດໄດ້ຈັ່ງໃດ?"[11]ລາວຕອບວ່າ, "ຊາຍຄົນໜຶ່ງຊື່ວ່າເຢຊູ ເຮັດຂີ້-
ຕົມຂຶ້ນມາແລະທາໃສ່ຕາຂອງເຮົາ, ແລະບອກກັບຂ້າພຣະເຈົ້າວ່າ 'ໄປທີ່ສະຊີໂລອາມແລະລ້າງອອກ' ຂ້າພຣະເຈົ້າຈຶ່ງໄປທີ່ນັ້ນແລະລ້າງອອກ
ແລະຂ້າພຣະເຈົ້າກໍເບິ່ງເຫັນຮຸ່ງໄດ້."[12]ເຂົາເວົ້າກັບຊາຍຄົນນັ້ນວ່າ, "ທ່ານຜູ້ນັ້ນຢູ່ໃສ" ລາວຕອບວ່າ, "ເຮົາບໍ່ຮູ້."
[13]ພວກເຂົາຈຶ່ງພາຄົນນັ້ນທີ່ເຄີຍຕາບອດໄປຫາພວກຟາຣີຊາຍ.[14]ວັນທີ່ພຣະ-
ເຢຊູຊົງເຮັດຕົມທາຕາຊາຍຕາບອດແລະເຮັດໃຫ້ລາວເຊົາຕາບອດນັ້ນແມ່ນວັນສະບາໂຕ.[15]ແລ້ວພວກຟາຣີຊາຍຈຶ່ງຖາມຊາຍຄົນນັ້ນອີກວ່າ
ລາວເບິ່ງເຫັນໄດ້ຈັ່ງໃດ. ລາວບອກກັບພວກເຂົາວ່າ, "ເພິ່ນໄດ້ເອົາຂີ້ຕົມທາຕາຂອງຂ້ານ້ອຍ, ແລ້ວຂ້ານ້ອຍໄດ້ໄປລ້າງອອກ
ແລະດຽວນີ້ຂ້ານ້ອຍກໍເຫັນຮຸ່ງ."
[16]ບາງຄົນໃນພວກຟາຣີຊາຍເວົ້າວ່າ, "ຊາຍຄົນນີ້ບໍ່ໄດ້ມາຈາກພຣະເຈົ້າ ເພາະວ່າເພິ່ນບໍ່ຖືຮັກສາວັນສະບາໂຕ" ຄົນອື່ນໆ ເວົ້າວ່າ,
"ເປັນຫຍັງຊາຍຜູ້ເປັນຄົນບາບຄືເຮັດໝາຍສຳຄັນແນວນີ້ໄດ້?" ຈຶ່ງມີການແບ່ງແຍກໃນພວກເຂົາ.[17]ພວກເຂົາຈຶ່ງຖາມຊາຍຄົນຕາ-
ບອດອີກເທື່ອໜຶ່ງວ່າ, "ເຈົ້າເດເວົ້າຢ່າງໃດໃນເມື່ອເພິ່ນເຮັດໃຫ້ເຈົ້າເຊົາຕາບອດ?" ຊາຍຄົນຕາບອດຕອບວ່າ, "ທ່ານເປັນຜູ້ປະກາດພຣະ-
ທັມ."[18]ຄົນຢິວຍັງຄົງບໍ່ເຊື່ອວ່າຊາຍຄົນນັ້ນເຄີຍຕາບອດແລະເຊົາຕາບອດແລ້ວ,
ຈົນກະທັ້ງເຂົາໄດ້ເອີ້ນພໍ່ແມ່ຂອງຊາຍຕາບອດທີ່ໄດ້ຮັບໂຜດໃຫ້ເບິ່ງເຫັນມາ.
[19]ພວກເຂົາຖາມພໍ່ແມ່ວ່າ, "ນີ້ເປັນລູກຊາຍຂອງໝູ່ເຈົ້າທີ່ໝູ່ເຈົ້າບອກວ່າເປັນຕາບອດແຕ່ເກີດແມ່ນບໍ?
ແລ້ວຕອນນີ້ລາວເບິ່ງເຫັນໄດ້ຢ່າງໃດ?"[20]ພໍ່ແມ່ຂອງຜູ້ນັ້ນຕອບວ່າ, "ພວກຂ້ານ້ອຍຮູ້ວ່າຜູ້ນີ້ເປັນລູກຂອງຂ້ານ້ອຍແລະລາວເກີດມາຕາບອດ.
[21]ຕອນນີ້ລາວເຫັນຮຸ່ງໄດ້ຢ່າງໃດ ເຮົາບໍ່ຮູ້, ຊາຍຄົນທີ່ເປີດຕາລາວ ພວກຂ້ານ້ອຍກໍບໍ່ຮູ້ຈັກ. ຖາມລາວເອງ, ລາວເປັນຜູ້ໃຫຍ່ແລ້ວ,
ລາວຄົງເວົ້າເລື່ອງຕົນເອງໄດ້."
[22]ພໍ່ແມ່ຂອງລາວທີ່ເວົ້າດັ່ງນີ້ກໍເພາະພວກເຂົາຢ້ານພວກຢິວ, ເນື່ອງຈາກພວກຢິວໄດ້ຕົກລົງກັນແລ້ວວ່າ, ຖ້າຜູ້ໃດຍອມຮັບວ່າຄົນນັ້ນເປັນພຣະ-
ຄຣິດ, ເຂົາຈະຕ້ອງຖືກໄລ່ອອກຈາກໂຮງທັມມະເທສະໜາ.[23]ດ້ວຍເຫດນີ້ ພໍ່ແມ່ຂອງລາວຈຶ່ງເວົ້າວ່າ, "ລາວເປັນຜູ້ໃຫຍ່ແລ້ວ ຖາມລາວເອງ."
[24]ພວກເຂົາຈຶ່ງເອີ້ນຊາຍຄົນທີ່ເຄີຍຕາບອດເຂົ້າມາເປັນເທື່ອທີສອງ ແລະບອກລາວວ່າ, "ຂໍກຽດນັ້ນຈົ່ງມີແດ່ພຣະເຈົ້າ,
ເຮົາຮູ້ວ່າຊາຍຄົນນີ້ເປັນຄົນບາບ."[25]ຊາຍຄົນນັ້ນຕອບວ່າ, "ຂ້ານ້ອຍບໍ່ຮູ້ວ່າຊາຍຄົນນັ້ນເປັນຄົນບາບ ແຕ່ສິ່ງໜຶ່ງທີ່ຂ້ານ້ອຍຮູ້ຕອນນີ້ຄື ຂ້າ-
ນ້ອຍຕາບອດແຕ່ດຽວນີ້ຂ້ານ້ອຍເຫັນແລ້ວ."
[26]ພວກເຂົາເວົ້າກັບຄົນນັ້ນວ່າ, "ເພິ່ນເຮັດຫຍັງໃຫ້ເຈົ້າ? ເພິ່ນເຮັດໃຫ້ຕາຂອງເຈົ້າເຊົາບອດໄດ້ຢ່າງໃດ?"[27]ລາວຕອບວ່າ, "ຂ້າ-
ນ້ອຍໄດ້ບອກພວກທ່ານແລ້ວແຕ່ທ່ານບໍ່ຟັງ! ເປັນຫຍັງພວກທ່ານຈຶ່ງຢາກຟັງອີກ?
ທ່ານຢາກຈະເປັນລູກສິດຂອງເພິ່ນເໝືອນກັນຫລື?"[28]ເຂົາຈຶ່ງເຍີ້ຍຄົນນັ້ນວ່າ, "ມຶງນັ້ນແຫລະ, ເປັນສິດຂອງມັນ ແຕ່ພວກເຮົານີ້ເປັນສິດຂອງໂມ-
ເຊ.[29]ຝ່າຍພວກເຮົາຮູ້ຢູ່ວ່າພຣະເຈົ້າໄດ້ຊົງກ່າວຕໍ່ໂມເຊ ແຕ່ຄົນນັ້ນພວກເຮົາບໍ່ຮູ້ວ່າມັນມາແຕ່ໃສ."
[30]ຊາຍຄົນນີ້ຈຶ່ງຕອບພວກເຂົາວ່າ, "ເລື່ອງນີ້ບໍ່ທຳມະດາເລີຍ, ທີ່ພວກທ່ານບໍ່ຮູ້ວ່າທ່ານຜູ້ນັ້ນມາແຕ່ໃສ, ແຕ່ເພິ່ນໄດ້ເຮັດໃຫ້ຕາຂອງຂ້າ-
ນ້ອຍເຊົາບອດ.[31]ເຮົາຮູ້ວ່າພຣະເຈົ້າບໍ່ໄດ້ຟັງຄົນບາບ, ແຕ່ຜູ້ໃດກໍຕາມທີ່ອຸທິດຕົນແລະເຮັດຕາມນໍ້າພຣະທັຍຂອງພຣະອົງ, ພຣະອົງຈະຟັງຜູ້ນັ້ນ.
[32]ຕັ້ງແຕ່ໂລກນີ້ເລີ່ມມາ ກໍບໍ່ເຄີຍໄດ້ຍິນວ່າມີຜູ້ໃດທີ່ສາມາດເຮັດໃຫ້ຄົນຕາບອດຕັ້ງແຕ່ເກີດເຊົາບອດໄດ້.[33]ຖ້າຫາກຊາຍຄົນນີ້ບໍ່ໄດ້ມາຈາກພຣະ-
ເຈົ້າແລ້ວ, ເພິ່ນກໍຄົງເຮັດຫຍັງບໍ່ໄດ້ເລີຍ."[34]ພວກເຂົາຕອບຊາຍຄົນນັ້ນວ່າ, "ເຈົ້າເກີດມາໃນຄວາມບາບທັງນັ້ນ ແລະເຈົ້າກຳລັງສອນເຮົາຫລື?"
ແລ້ວເຂົາໂຍນຊາຍຄົນນັ້ນອອກໄປ.
[35]ເມື່ອພຣະເຢຊູຊົງໄດ້ຍິນວ່າເຂົາໄດ້ໄລ່ຄົນນັ້ນອອກແລ້ວຈາກທັມະເທສະໜາ, ພຣະອົງຊົງພົບລາວແລະເວົ້າວ່າ, "ເຈົ້າເຊື່ອໃນບຸດມະ-
ນຸດຫລື?"[36]ລາວຕອບວ່າ, "ຜູ້ນັ້ນແມ່ນໃຜ ອົງພຣະຜູ້ເປັນເຈົ້າ, ເພື່ອທີ່ຂ້ານ້ອຍຈະເຊື່ອໃນທ່ານຜູ້ນັ້ນ?"[37]ພຣະເຢຊູກ່າວກັບລາວວ່າ,
"ເຈົ້າໄດ້ເຫັນທ່ານຜູ້ນັ້ນແລ້ວ, ແລະຄືຜູ້ນັ້ນຄືຜູ້ກຳລັງເວົ້າກັບເຈົ້າຢູ່."[38]ຊາຍຄົນນັ້ນທູນວ່າ, "ອົງພຣະຜູ້ເປັນເຈົ້າເອີຍ, ຂ້ານ້ອຍເຊື່ອ"
ແລະລາວຈຶ່ງຂາບລົງໄຫວ້ພຣະອົງ.
[39]ພຣະເຢຊູກ່າວວ່າ, "ສຳລັບການພິພາກສານັ້ນເຮົາໄດ້ມາໃນໂລກນີ້ ເພື່ອຄົນທີ່ບໍ່ເຫັນຈະໄດ້ເຫັນ ແລະຄົນທີ່ເຫັນແລ້ວຈະຕາບອດ."[40]ພວກຟາ-
ຣີຊາຍບາງຄົນທີ່ຢູ່ກັບພຣະອົງໄດ້ຍິນສິ່ງເຫລົ່ານີ້ກໍເວົ້າວ່າ, "ເຮົາຕາບອດເໝືອນກັນຫລື?"[41]"ຖ້າພວກທ່ານຕາບອດ,
ທ່ານຈະບໍ່ມີຄວາມຜິດບາບ, ແຕ່ບັດນີ້ພວກທ່ານເວົ້າວ່າ 'ເຮົາເຫັນ' ບາບຂອງພວກທ່ານກໍຍັງມີຢູ່."

10 [1]“ເຮົາບອກຄວາມຈິງກັບທ່ານວ່າ, ຖ້າຜູ້ໃດບໍ່ໄດ້ເຂົ້າມາທາງປະຕູຂອງຄອກແກະ, ແຕ່ປີນເຂົ້າໄປທາງອື່ນ, ຜູ້ນັ້ນກໍເປັນຂະໂມຍແລະໂຈນ.
[2]ແຕ່ຜູ້ໃດທີ່ເຂົ້າມາທາງປະຕູ ຜູ້ນັ້ນກໍເປັນຜູ້ລ້ຽງແກະ.

[3]ນາຍປະຕູຈະໄຂປະຕູໃຫ້ແກ່ເຂົາ. ແກະໄດ້ຍິນສຽງຂອງເຂົາ ແລະເຂົາເອີ້ນແກະແຕ່ລະໂຕຕາມຊື່ແລະພາອອກໄປ.
[4]ເມື່ອເຂົາພາແກະທັງໝົດອອກໄປຂ້າງນອກເອງ, ເຂົາກໍຍ່າງນຳໜ້າຝູງແກະ ແລະຝູງແກະກໍຕິດຕາມເຂົາ ເພາະແກະຮູ້ຈັກສຽງຂອງເຂົາ.
[5]ພວກມັນຈະບໍ່ຕາມຄົນແປກໜ້າ ແຕ່ຈະພະຍາຍາມຫລີກລ່ຽງດ້ວຍ, ເພາະວ່າພວກແກະບໍ່ຮູ້ຈັກສຽງຂອງຄົນແປກໜ້າ.”[6]ພຣະ-
ເຢຊູກ່າວຄຳອຸປະມາແກ່ພວກເຂົາ, ແຕ່ພວກເຂົາບໍ່ໄດ້ເຂົ້າໃຈວ່າ ສິ່ງເຫລົ່ານີ້ທີ່ພຣະອົງກ່າວນັ້ນມີຄວາມໝາຍຢ່າງໃດ.
[7]ພຣະເຢຊູຊົງກ່າວກັບພວກເຂົາອີກວ່າ, “ເຮົາບອກຄວາມຈິງກັບທ່ານວ່າ, ເຮົາເປັນປະຕູຂອງແກະທັງຫລາຍ.
[8]ບັນດາຜູ້ທີ່ມາກ່ອນເຮົານັ້ນກໍເປັນຂະໂມຍແລະໂຈນ, ແຕ່ແກະຈະບໍ່ຟັງພວກເຂົາ.
[9]ເຮົາເປັນປະຕູ. ຖ້າຜູ້ໃດເຂົ້າມາທາງເຮົາ, ຜູ້ນັ້ນຈະລອດ; ເຂົາຈະເຂົ້າອອກແລະພົບທົ່ງຫຍ້າ.[10]ຂະໂມຍນັ້ນມາເພື່ອຕ້ອງການຈະລັກ ຫລືຂ້າ
ແລະທຳລາຍ, ແຕ່ເຮົາມາເພື່ອໃຫ້ຄົນເຫລົ່ານັ້ນໄດ້ມີຊີວິດ ແລະມີຊີວິດຢ່າງຄົບບໍຣິບູນ.
[11]ເຮົາເປັນຜູ້ລ້ຽງແກະທີ່ດີ. ຜູ້ລ້ຽງທີ່ດີຈະສະຫລະຊີວິດເພື່ອແກະຂອງຕົນ.[12]ຄົນຮັບໃຊ້ທີ່ຖືກຈ້າງມາບໍ່ແມ່ນຜູ້ລ້ຽງແກະ, ເມື່ອເຫັນໝາ-
ໄນມາຜູ້ນັ້ນກໍປະຖິ້ມຝູງແກະນັ້ນໄວ້ແລະປົບໜີໄປ, ແລ້ວໝາໄນກໍມາຂ້າ ແລະເຮັດໃຫ້ມັນແຕກຊະກັນໄປ.[13]ຄົນນັ້ນໜີໄປ
ເພາະເປັນຄົນຮັບໃຊ້ທີ່ຖືກຈ້າງມາ, ເຂົາຈຶ່ງບໍ່ໄດ້ຫ່ວງໃຍແກະເຫລົ່ານັ້ນ.
[14]ເຮົາເປັນຜູ້ລ້ຽງທີ່ດີ ເຮົາຮູ້ຈັກແກະຂອງເຮົາ ແລະແກະຂອງເຮົາກໍຮູ້ຈັກເຮົາ.[15]ພຣະບິດາຊົງຮູ້ຈັກເຮົາ ແລະເຮົາຮູ້ຈັກພຣະບິ-
ດາ, ແລະເຮົາກໍສະຫລະຊີວິດຂອງເຮົາເພື່ອແກະເຫລົ່ານັ້ນ.[16]ເຮົາຍັງມີແກະອີກຫລວງຫລາຍທີ່ບໍ່ໄດ້ຢູ່ໃນຄອກນີ້, ເຮົາຕ້ອງພາພວກເຂົາກັບມາ,
ພວກເຂົາຈະໄດ້ຍິນສຽງຂອງເຮົາແລະຈະຮ່ວມເປັນຝູງດຽວ ແລະມີຜູ້ລ້ຽງແກະແຕ່ຜູ້ດຽວ.
[17]ນີ້ເປັນເຫດທີ່ພຣະບິດາຊົງຮັກເຮົາ ເພາະເຮົາສະຫລະຊີວິດຂອງເຮົາ ເພື່ອທີ່ເຮົາຈະໄດ້ຊີວິດອີກຄັ້ງ.[18]ບໍ່ມີຜູ້ໃດທີ່ຈະຍາດເອົາຊີ-
ວິດຂອງເຮົາໄປໄດ້, ແຕ່ເຮົາຍອມສະຫລະຊີວິດຂອງເຮົາດ້ວຍສະໝັກໃຈເອງ, ເຮົາມີສິດທີ່ຈະສະຫລະແລະເຮົາກໍມີສິດທີ່ຈະມີຊີວິດອີກຄັ້ງ,
ເຮົາໄດ້ຮັບຄຳສັ່ງນີ້ຈາກພຣະບິດາຂອງເຮົາ.”
[19]ດ້ວຍຂໍ້ຄວາມນີ້ເອງກໍເຮັດໃຫ້ເກີດການແຕກແຍກອີກຄັ້ງທ່າມກາງພວກຄົນຢິວ.[20]ພວກເຂົາຫລາຍຄົນເວົ້າວ່າ,
“ມັນມີຜີຮ້າຍສິງຢູ່ແລະມັນເປັນຄົນບ້າ, ພວກເຈົ້າເຂົ້າໄປຟັງມັນເຮັດຫຍັງ?”[21]ພວກອື່ນກໍເວົ້າວ່າ,
“ນີ້ບໍ່ແມ່ນຄຳເວົ້າທີ່ມາຈາກຄົນທີ່ມີຜີຮ້າຍສິງຢູ່, ຜີຮ້າຍນັ້ນຈະເຮັດໃຫ້ຄົນຕາບອດເບິ່ງເຫັນໄດ້ຫລື?”
[22]ໃນຂະນະນັ້ນກໍເຖິງເທສະການສະຫລອງພຣະວິຫານທີ່ນະຄອນເຢຣູຊາເລັມ.[23]ຊ່ວງນັ້ນເປັນຊ່ວງຣະດູໜາວ, ພຣະເຢຊູກຳລັງຍ່າງໄປມາທີ່ລະ-
ບຽງຂອງໂຊໂລໂມນໃນພຣະວິຫານ.[24]ແລ້ວພວກຄົນຢິວກໍພາກັນມາລ້ອມພຣະອົງເວົ້າວ່າ, “ທ່ານຈະໃຫ້ພວກເຮົາສົງສັຍຢູ່ເຖິງປານໃດ?
ຖ້າຫາກທ່ານເປັນພຣະຄຣິດ ຈົ່ງບອກພວກເຮົາຢ່າງເປີດເຜີຍເຖີດ.”
[25]ພຣະເຢຊູຕອບພວກເຂົາວ່າ, “ເຮົາໄດ້ບອກພວກທ່ານແລ້ວແຕ່ທ່ານບໍ່ເຊື່ອ, ກິຈະການທີ່ເຮົາໄດ້ເຮັດໂດຍພຣະນາມຂອງພຣະບິດາຂອງເຮົາ
ໄດ້ເປັນພະຍານກ່ຽວກັບຕົວເຮົາ.[26]ທີ່ພວກທ່ານຍັງບໍ່ເຊື່ອເພາະທ່ານບໍ່ແມ່ນແກະຂອງເຮົາ.
[27]ແກະຂອງເຮົາໄດ້ຍິນສຽງຂອງເຮົາ, ເຮົາຮູ້ຈັກແກະຂອງເຮົາ, ແລະແກະກໍຕິດຕາມເຮົາ.[28]ເຮົາຈະໃຫ້ພວກເຂົາມີຊີວິດອັນຕະຫລອດໄປເປັນ-
ນິດ; ເພາະພວກເຂົາຈະບໍ່ຕາຍ ແລະຈະບໍ່ມີຜູ້ໃດຍາດພວກເຂົາອອກຈາກມືຂອງເຮົາໄດ້.
[29]ພຣະບິດາຂອງເຮົາ ຜູ້ທີ່ມອບພວກເຂົາໄວ້ແກ່ເຮົາ ນັ້ນຍິ່ງໃຫຍ່ກວ່າທຸກຄົນ ແລະກໍບໍ່ມີໃຜທີ່ຈະອາດຍາດເອົາພວກເຂົາອອກຈາກພຣະ-
ຫັດຂອງພຣະບິດາໄດ້.[30]ເຮົາແລະພຣະບິດາຂອງເຮົາເປັນໜຶ່ງດຽວ.”[31]ແລ້ວພວກຄົນຢິວກໍຢິບເອົາກ້ອນຫີນຂຶ້ນມາເພື່ອຈະຄວ່າງໃສ່ພຣະອົງ.
[32]ພຣະເຢຊູກ່າວຕອບພວກເຂົາວ່າ, “ເຮົາໄດ້ໃຫ້ທ່ານເຫັນການງານອັນດີຫລາຍປະການຈາກພຣະບິດາ
ແລະດ້ວຍເຫດເພາະການງານເຫລົ່ານີ້ທ່ານຈະເອົາກ້ອນຫີນຄວ່າງໃສ່ເຮົາຫລື?”[33]ພວກຢິວຕອບຄືນພຣະອົງວ່າ,
“ເຮົາບໍ່ໄດ້ຄວ່າງກ້ອນຫີນເຫດເພາະການງານທີ່ດີເຫລົ່ານັ້ນ, ແຕ່ເພາະການໝິ່ນປະໝາດ ເພາະເຈົ້າ, ເປັນພຽງມະນຸດ ແຕ່ຕັ້ງຕົວເປັນພຣະ-
ເຈົ້າ.”
[34]ພຣະເຢຊູຕອບພວກເຂົາວ່າ, “ ບໍ່ໄດ້ຂຽນໄວ້ໃນພຣະບັນຍັດຂອງທ່ານຫລື ‘ເຮົາກ່າວວ່າ
"ທ່ານເປັນເທບພຣະເຈົ້າ’?"[35]ຖ້າຫາກເຂົາເອີ້ນພວກນັ້ນວ່າເປັນເທບພຣະເຈົ້າ ຄົນເຫລົ່ານັ້ນເອົາຄຳວ່າ"ພຣະເຈົ້າ"ມາຈາກໃສ (ຂໍ້ພຣະ-
ຄັມພີມີອາດປ່ຽນແປງໄດ້).[36]‘ທ່ານໝິ່ນປະໝາດ’ ເພາະເຮົາໄດ້ກ່າວວ່າ ‘ເຮົາເປັນບຸດຂອງພຣະເຈົ້າ?’
[37]ຖ້າເຮົາບໍ່ເຮັດພຣະຣາຊະກິດພຣະບິດາຂອງເຮົາ, ຢ່າໄດ້ເຊື່ອເຮົາ.[38]ແຕ່ຖ້າເຮົາເຮັດພຣະຣາຊະກິດເຫລົ່ານັ້ນ ເຖິງວ່າທ່ານຈະບໍ່ເຊື່ອໃນຄຳເຮົາ,
ຂໍໃຫ້ພວກທ່ານຈົ່ງເຊື່ອໃນພຣະຣາຊະກິດນັ້ນ, ເພື່ອທີ່ທ່ານຈະຮູ້ແລະສາມາດເຂົ້າໃຈວ່າ ພຣະບິດາຊົງຢູ່ໃນເຮົາແລະເຮົາຢູ່ໃນພຣະບິ-
ດາ.”[39]ພວກເຂົາຈຶ່ງພະຍາຍາມຈັບກຸມພຣະອົງອີກຄັ້ງ, ແຕ່ພຣະອົງກໍໜີພົ້ນຈາກເງື້ອມມືຂອງພວກເຂົາ.
[40]ພຣະອົງອອກໄປຈາກທີ່ນັ້ນອີກຄັ້ງ ແລະຂ້າມໄປອີກຟາກແມ່ນ້ຳຢໍແດນ ໄປເຖິງບ່ອນໂຢຮັນໃຫ້ຮັບບັບຕິສະມາຄັ້ງທຳອິດ, ແລ້ວພຣະ-
ອົງກໍປຣະທັບຢູ່ທີ່ນັ້ນ.[41]ມີຫລາຍຄົນມາຫາພຣະອົງແລ້ວກ່າວວ່າ, “ໂຢຮັນບໍ່ໄດ້ເຮັດໝາຍສຳຄັນອັນໃດ, ແຕ່ທຸກສິ່ງທີ່ໂຢ-
ຮັນໄດ້ກ່າວກ່ຽວກັບທ່ານຜູ້ນີ້ກໍເປັນຄວາມຈິງ.”[42]ຜູ້ຄົນຫລວງຫລາຍໄດ້ເຊື່ອພຣະອົງທີ່ນັ້ນ.


generated on Tue Jun 17 19:01:42 2025

11 [1]ເບິ່ງແມ ມີຊາຍຄົນໜຶ່ງຊື່ລາຊະໂຣປ່ວຍຢູ່ ທີ່ບ້ານເບັດທານີ ຄືບ້ານຂອງນາງມາຣີອາ ແລະມາທາສອງເອື້ອຍນ້ອງ.[2]ມາຣີອາ
ຜູ້ນີ້ທີ່ໄດ້ເອົານ້ຳມັນຫອມສົ່ງອົງພຣະຜູ້ເປັນເຈົ້າ ແລະໃຊ້ຜົມຂອງຕົນເຊັດພຣະບາດຂອງພຣະອົງ, ລາຊະ-
ໂຣນ້ອງຊາຍຂອງນາງກຳລັງນອນປ່ວຍຢູ່.

[3]ເອື້ອຍທັງສອງນີ້ໄດ້ໃຊ້ຄົນໄປຫາພຣະເຢຊູທູນວ່າ, "ອົງພຣະຜູ້ເປັນເຈົ້າ, ເບິ່ງແມ ຜູ້ທີ່ພຣະອົງຊົງຮັກກຳລັງປ່ວຍ"[4]ເມື່ອພຣະເຢຊູຊົງໄດ້ຍິນດັ່ງ-
ນັ້ນ ພຣະອົງກ່າວວ່າ, "ການປ່ວຍໄຂ້ນີ້ຈະບໍ່ຕາຍດອກ, ແຕ່ເພື່ອຊູກຽດຕິຍົດຂອງພຣະເຈົ້າ ເພື່ອທີ່ພຣະບຸດຂອງພຣະເຈົ້າຈະໄດ້ຮັບກຽດຕິ-
ຍົດເພາະການປ່ວຍໄຂ້ນັ້ນ."
[5]ເພາະພຣະເຢຊູຊົງຮັກມາທາແລະນ້ອງສາວຂອງນາງແລະລາຊະໂຣ.[6]ເມື່ອພຣະອົງໄດ້ຍິນວ່າລາຊະໂຣປ່ວຍ,
ພຣະເຢຊູຍັງຄົງພັກຢູ່ບ່ອນເດີມຕໍ່ອີກສອງວັນ.[7]ຫລັງຈາກນັ້ນ, ພຣະອົງກ່າວກັບພວກສາວົກຂອງພຣະອົງວ່າ, "ໃຫ້ເຮົາພາກັນໄປຍັງແຂວງຢູ-
ດາຍອີກຄັ້ງໜຶ່ງເທາະ."
[8]ພວກສາວົກທູນພຣະອົງວ່າ, "ອາຈານ, ເວລານີ້ພວກຢິວກຳລັງຫາທາງເອົາຫີນຄວ່າງໃສ່ພຣະອົງ
ແລະພຣະອົງຍັງຈະກັບໄປທີ່ນັ້ນອີກຫລື?"[9]ພຣະເຢຊູຕອບວ່າ, "ໃນໜຶ່ງວັນມີສິບສອງຊົ່ວໂມງທີ່ສະຫວ່າງບໍ່ແມ່ນຫລື?
ຖ້າຄົນໃດຍ່າງໄປໃນຕອນກາງເວັນກໍຈະບໍ່ສະດຸດ, ເພາະວ່າເພິ່ນສາມາດເບິ່ງເຫັນໂດຍອາສັຍຄວາມສະຫວ່າງຂອງໂລກນີ້.
[10]ຢ່າງໃດກໍຕາມ, ຖ້າຜູ້ນັ້ນຍ່າງໄປໃນເວລາກາງຄືນ ເຂົາຈະສະດຸດ, ເພາະວ່າຄວາມສະຫວ່າງບໍ່ໄດ້ຢູ່ໃນເພິ່ນ."[11]ຫລັງຈາກທີ່ພຣະ-
ອົງກ່າວສິ່ງເຫລົ່ານີ້ແລ້ວ ພຣະອົງບອກກັບພວກສາວົກວ່າ, "ລາຊະໂຣເພື່ອນຂອງເຮົາກຳລັງນອນຫລັບຢູ່, ແຕ່ເຮົາຈະໄປປຸກລາວໃຫ້ຕື່ນ."
[12]ດັ່ງນັ້ນພວກສາວົກຈຶ່ງທູນພຣະອົງວ່າ, "ອົງພຣະຜູ້ເປັນເຈົ້າ, ຖ້າຫາກລາວນອນຫລັບຢູ່ ລາວກໍຄົງຈະດີປ່ວຍ."[13]ແຕ່ທີ່ພຣະ-
ເຢຊູກ່າວນັ້ນໝາຍເຖິງຄວາມຕາຍຂອງລາຊະໂຣ, ແຕ່ພວກສາວົກຄິດວ່າທີ່ພຣະອົງກ່າວນັ້ນໝາຍເຖິງການນອນຫລັບພັກຜ່ອນ.[14]ແລ້ວພຣະ-
ເຢຊູຈຶ່ງຊົງບອກພວກເຂົາຢ່າງກົງໆ ວ່າ, "ລາຊະໂຣຕາຍແລ້ວ.
[15]ເຮົາຍິນດີເພາະເຫັນແກ່ທ່ານທັງຫລາຍ, ທີ່ເຮົາບໍ່ໄດ້ຢູ່ທີ່ນັ້ນກໍເພື່ອທີ່ທ່ານຈະໄດ້ເຊື່ອ. ໃຫ້ພວກເຮົາພາກັນໄປຫາລາວເທາະ."[16]ໂທ-
ມາທີ່ເອີ້ນອີກວ່າຝາແຝດ, ເວົ້າກັບບັນດາສາວົກຂອງລາວວ່າ, "ໃຫ້ພວກເຮົາພາກັນໄປກັບພຣະອົງ ເພື່ອທີ່ເຮົາຈະໄດ້ຕາຍກັບພຣະເຢຊູ."
[17]ເມື່ອພຣະເຢຊູມາເຖິງ ພຣະອົງຊົງຮູ້ວ່າລາຊະໂຣຢູ່ຖືກນຳໄປຝັງໄວ້ໃນອຸບໂມງໄດ້ສີ່ວັນແລ້ວ.[18]ບ້ານເບັດທານີນັ້ນຢູ່ໃກ້ຈາກນະຄອນເຢຣູຊາ-
ເລັມປະມານສິບຫ້າກິໂລແມັດ.[19]ພວກຢິວຫລາຍຄົນມາຫານາງມາທາແລະມາຣີອາ ເພື່ອເລົ້າໂລມໃຈເຂົາເນື່ອງດ້ວຍນ້ອງຊາຍຂອງພວກເຂົາ.
[20]ເມື່ອມາທາໄດ້ຍິນວ່າພຣະເຢຊູກຳລັງສະເດັດມາ, ນາງຈຶ່ງອອກໄປພົບພຣະອົງ, ແຕ່ມາຣີອາຍັງນັ່ງຢູ່ໃນເຮືອນ.
[21]ແລ້ວມາທາທູນພຣະອົງວ່າ, "ອົງພຣະຜູ້ເປັນເຈົ້າ, ຖ້າພຽງແຕ່ພຣະອົງຢູ່ທີ່ນີ້ ນ້ອງຊາຍຂອງຂ້ານ້ອຍກໍຄົງບໍ່ຕາຍ.[22]ແຕ່ຂ້ານ້ອຍຊາບວ່າ
ບໍ່ວ່າສິ່ງໃດກໍຕາມທີ່ພຣະອົງຈະທູນຂໍເວລານີ້ຈາກພຣະເຈົ້າ, ພຣະເຈົ້າຈະຊົງໂຜດປະທານໃຫ້ກັບພຣະອົງ."[23]ພຣະເຢຊູກ່າວກັບນາງວ່າ,
"ນ້ອງຊາຍຂອງເຈົ້າຈະຟື້ນຄືນມາອີກຄັ້ງ."
[24]ມາທາທູນພຣະອົງວ່າ, "ຂ້ານ້ອຍຮູ້ວ່າລາວຈະຟື້ນຄືນມາອີກຄັ້ງໃນການຟື້ນຄືນໃນວັນສຸດທ້າຍ."[25]ພຣະເຢຊູກ່າວກັບນາງວ່າ,
"ເຮົາເປັນເຫດໃຫ້ເປັນຄືນຈາກຄວາມຕາຍແລະເປັນຊີວິດ, ຜູ້ທີ່ເຊື່ອໃນເຮົາ ເຖິງແມ່ນວ່າເຂົາຕາຍ ເຂົາຈະມີຊີວິດຢູ່.[26]ແລະໃຜກໍຕາມທີ່ຍັງມີຊີ-
ວິດຢູ່ແລະເຊື່ອໃນເຮົາຈະບໍ່ມີມື້ຕາຍ. ເຈົ້າເຊື່ອຂໍ້ນີ້ຫລື?"
[27]ນາງທູນພຣະອົງວ່າ, "ແມ່ນແລ້ວອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍເຊື່ອວ່າທ່ານເປັນພຣະຄຣິດ, ພຣະບຸດຂອງພຣະເຈົ້າ
ທີ່ສະເດັດມາໃນໂລກນີ້."[28]ເມື່ອນາງກ່າວເຊັ່ນນີ້ແລ້ວນາງກໍອອກໄປແລະເອີ້ນມາຣີອາ ນ້ອງສາວເປັນການສ່ວນຕົວແລະເວົ້າວ່າ, "ທ່ານອາ-
ຈານຢູ່ທີ່ນີ້ແລະກຳລັງເອີ້ນຫາເຈົ້າ."[29]ເມື່ອນາງໄດ້ຍິນເຊັ່ນນັ້ນ ຈຶ່ງລຸກຂຶ້ນຢ່າງໄວແລະໄປຫາພຣະອົງ.
[30]ເວລານັ້ນພຣະເຢຊູຍັງບໍ່ໄດ້ເຂົ້າໄປໃນໝູ່ບ້ານ ແຕ່ຍັງຢູ່ບ່ອນທີ່ມາທາໄດ້ພົບພຣະອົງ.[31]ເມື່ອພວກຢິວ, ທີ່ຢູ່ໃນເຮືອນກັບນາງແລະກຳ-
ລັງເລົ້າໂລມລາວຢູ່ນັ້ນ, ໄດ້ເຫັນມາຣີອາຟ້າວລຸກຂຶ້ນອອກໄປຢ່າງໄວວາ, ພວກເຂົາຈຶ່ງຕາມນາງໄປ ເພາະນຶກວ່ານາງກຳລັງຈະໄປຮ້ອງ-
ໄຫ້ທີ່ອຸບໂມງ.[32]ເມື່ອນາງມາຣີອາມາເຖິງບ່ອນທີ່ພຣະເຢຊູປະທັບຢູ່ແລະເຫັນພຣະອົງ, ນາງຈຶ່ງຂາບລົງທີ່ພຣະບາດຂອງພຣະອົງແລະທູນວ່າ,
"ອົງພຣະຜູ້ເປັນເຈົ້າ, ຖ້າພຽງແຕ່ພຣະອົງຢູ່ທີ່ນີ້, ນ້ອງຊາຍຂອງຂ້ານ້ອຍກໍຄົງບໍ່ຕາຍ."
[33]ເມື່ອພຣະເຢຊູເຫັນນາງຮ້ອງໄຫ້, ແລະພວກຢິວທີ່ມາກັບນາງກຳລັງຮ້ອງໄຫ້ເໝືອນກັນ, ພຣະອົງກໍຮູ້ສຶກສະເທືອນພະທັຍແລະເປັນທຸກຫລາຍ.
[34]ພຣະອົງກ່າວວ່າ, "ເຈົ້າໄດ້ເອົາສົບໄປໄວ້ທີ່ໃດ" ພວກເຂົາທູນຕອບວ່າ, "ອົງພຣະຜູ້ເປັນເຈົ້າ, ເຊີນສະເດັດມາເບິ່ງແມ."[35]ພຣະເຢຊູຊົງພຣະ-
ກັນແສງ.
[36]ແລ້ວພວກຢິວກໍເວົ້າວ່າ, "ເບິ່ງດູ ເພິ່ນຮັກລາຊະໂຣຫລາຍຊ່ຳໃດໜໍ!"[37]ແຕ່ບາງຄົນໃນພວກເຂົາເວົ້າວ່າ,
"ຄົນຜູ້ນີ້ບໍ່ແມ່ນບໍ່ທີ່ສາມາດຮັກສາຄົນຕາບອດໄດ້, ຈະຊ່ວຍໃຫ້ຊາຍຄົນນີ້ບໍ່ຕາຍບໍ່ໄດ້ຫລື?"
[38]ຈາກນັ້ນ, ພຣະເຢຊູສະເດັດໄປເຖິງອຸບໂມງພ້ອມກັບຊົງສະເທືອນພຣະທັຍ, ເມື່ອໄປເຖິງທີ່ອຸໂມງ. ທີ່ປາກຖ້ຳມີຫີນອັດປາກໄວ້.[39]ພຣະເຢຊູກ່າວວ່າ,
"ຈົ່ງເອົາຫີນອອກເສັຽ" ມາທາເອື້ອຍຂອງລາຊະໂຣທີ່ເສັຽຊີວິດທູນພຣະອົງວ່າ, "ອົງພຣະຜູ້ເປັນເຈົ້າ, ຈົນເຖິງເວລານີ້
ຮ່າງກາຍກໍຄົງຈະເນົ່າເປື່ອຍ, ເພາະລາວຕາຍມາໄດ້ສີ່ວັນແລ້ວ."[40]ພຣະເຢຊູຕອບກັບນາງວ່າ, "ເຮົາບໍ່ໄດ້ບອກເຈົ້າຫລືວ່າ, ຖ້າເຈົ້າເຊື່ອ
ເຈົ້າຈະໄດ້ເຫັນສະຫງ່າຣາສີຂອງພຣະເຈົ້າ?"
[41]ພວກເຂົາຈຶ່ງຍົກຫີນອອກ. ພຣະເຢຊູເງີຍພຣະພັກຂຶ້ນແລ້ວກ່າວວ່າ, "ພຣະບິດາເອີຍ, ຂ້ານ້ອຍຂອບພຣະຄຸນພຣະອົງ ທີ່ພຣະອົງຊົງຟັງຂ້າ-
ນ້ອຍ.[42]ຂ້ານ້ອຍຮູ້ວ່າພຣະອົງຊົງຟັງສຽງຂອງຂ້ານ້ອຍຢູ່ສະເໝີ, ແຕ່ເພາະຝູງຄົນທັງຫລາຍທີ່ຢືນອ້ອມຮອບຂ້ານ້ອຍ ທີ່ຂ້ານ້ອຍເວົ້າຢ່າງນີ້ກໍ,
ເພື່ອທີ່ພວກເຂົາຈະໄດ້ເຊື່ອວ່າພຣະອົງໄດ້ຊົງໃຊ້ຂ້ານ້ອຍມາ."
[43]ຫລັງຈາກທີ່ພຣະອົງກ່າວເຊັ່ນນັ້ນແລ້ວ, ພຣະອົງເປັ່ງສຽງອັນດັງວ່າ, "ລາຊະໂຣເອີຍ, ຈົ່ງອອກມາສາ."[44]ຜູ້ຕາຍນັ້ນກໍໄດ້ອອກມາ; ທັງມື ແລະ
ຕີນຂອງເຂົາຍັງມີຜ້າພັນຢູ່, ແລະໃບໜ້າຂອງເຂົາກໍຍັງມີຜ້າພັນຢູ່ນຳ. ພຣະເຢຊູບອກກັບພວກເຂົາວ່າ,
"ຈົ່ງແກ້ຜ້າທີ່ພັນເຂົາແລະປ່ອຍເຂົາເຖີດ."
[45]ພວກຢິວຫລາຍຄົນທີ່ໄດ້ມາຫາມາຣີອາ ແລະໄດ້ເຫັນສິ່ງທີ່ພຣະເຢຊູເຮັດກໍເຊື່ອໃນພຣະອົງ.[46]ແຕ່ບາງຄົນນັ້ນໄດ້ໄປຫາພວກຟາຣີຊາຍ
ເພື່ອບອກສິ່ງທີ່ພຣະເຢຊູໄດ້ຊົງເຮັດ.

 generated on Tue Jun 17 19:01:42 2025

[47]ແລ້ວພວກຫົວໜ້າປະໂລຫິດແລະພວກຟາຣີຊາຍ ເອີ້ນປະຊຸມສະມາຊິກສະພາກ່າວວ່າ, “ພວກເຮົາຈະເຮັດແນວໃດ?
ຊາຍຜູ້ນີ້ໄດ້ເຮັດໝາຍສຳຄັນຫລາຍປະການ.[48]ຖ້າເຮົາຈະປ່ອຍລາວໄປແບບນີ້, ທຸກຄົນຈະຫລົງເຊື່ອລາວແລ້ວ;
ພວກໂຣມຈະມາທຳລາຍເອົາພຣະວິຫານ ແລະຊົນຊາດຂອງເຮົາໄປ.”
[49]ແຕ່ຊາຍຄົນໜຶ່ງໃນພວກເຂົາ, ຊື່ກາຢະຟາ, ທີ່ເປັນມະຫາປະໂລຫິດໃນປີນັ້ນ, ໄດ້ກ່າວກັບພວກເຂົາວ່າ, “ພວກທ່ານບໍ່ຮູ້ຈັກຫຍັງເລີຍ,
[50]ທ່ານບໍ່ພິຈາຣະນາເບິ່ງເລີຍບໍ່ວ່າໃຫ້ຊາຍຄົນນີ້ຄົນດຽວຕາຍເພື່ອທຸກຄົນກໍດີກວ່າໃຫ້ທັງປະເທດຊາດຈິບຫາຍ.”
[51]ສິ່ງທີ່ທ່ານໄດ້ກ່າວຄຳນັ້ນກໍບໍ່ມາຈາກຕົວລາວເອງ. ແຕ່ເພາະໃນປີນັ້ນທ່ານເປັນມະຫາປະໂລຫິດ, ທ່ານຈຶ່ງໄດ້ທວາຍໄວ້ກ່ອນວ່າພຣະ-
ເຢຊູຈະສິ້ນພຣະຊົນຕາງຊົນຊາດນັ້ນ,[52]ແລະບໍ່ແມ່ນແທນຊົນຊາດດຽວເທົ່ານັ້ນ, ແຕ່ເພື່ອຮວບຮວມບັນດາບຸດຂອງພຣະ-
ເຈົ້າທັງຫລາຍທີ່ແຕກກະຈັດກະຈາຍໃຫ້ເຂົ້າເປັນໜຶ່ງດຽວ.[53]ຫລັງຈາກວັນນັ້ນມາພວກເຂົາກໍເລີ່ມວາງແຜນເພື່ອຫາທາງຂ້າພຣະ-
ອົງໃຫ້ເຖິງແກ່ຄວາມຕາຍ.
[54]ພຣະເຢຊູບໍ່ໄດ້ສະເດັດຢ່າງເປີດເຜີຍຖ້າມກາງພວກຄົນຢິວອີກ, ແຕ່ໄດ້ສະເດັດອອກຈາກທີ່ນັ້ນໄປຍັງຊົນນະບົດທີ່ຢູ່ໃກ້ປ່າ
ເຂົ້າໄປເຖິງເມືອງໜຶ່ງທີ່ເອີ້ນວ່າ ເອຟຣາອິມ. ພຣະອົງປຣະທັບກັບພວກສາວົກທີ່ນັ້ນ.[55]ຂະນະນັ້ນເທສະການປັດສະຄາຂອງຊາດຢິວກໍໃກ້ເຂົ້າມາ,
ແລະຜູ້ຄົນຫລວງຫລາຍຈາກຊົນນະບົດກໍໄດ້ຂຶ້ນໄປຍັງນະຄອນເຢຣູຊາເລັມກ່ອນເທສະການປັດສະຄາ ເພື່ອຊໍາຮະຕົວຂອງພວກເຂົາໃຫ້ບໍຣິສຸດ.
[56]ພວກເຂົາກຳລັງຊອກຫາພຣະເຢຊູ ແລະເວົ້າກັນໃນຂະນະທີ່ຢືນຢູ່ໃນບໍຣິເວນພຣະວິຫານວ່າ, “ທ່ານຄຶດເຫັນຢ່າງ-
ໃດ? ເພິ່ນຈະບໍ່ມາໃນງານເທສະການນີ້ຫລື?[57]ແລ້ວພວກຫົວໜ້າປະໂລຫິດແລະພວກຟາຣີຊາຍ ໄດ້ອອກຄຳສັ່ງໄວ້ວ່າ
ຖ້າຜູ້ໃດກໍຕາມຮູ້ວ່າພຣະເຢຊູຢູ່ໃສ, ຜູ້ນັ້ນຈະຕ້ອງມາລາຍງານແກ່ພວກເຂົາ ເພື່ອທີ່ພວກເຂົາຈະໄປຈັບພຣະອົງ.


generated on Tue Jun 17 19:01:42 2025

12 1ກ່ອນເຖິງເທສະການປັດສະຄາຫົກວັນ, ພຣະເຢຊູໄດ້ສະເດັດມາຮອດບ້ານເບັດທານີ, ທີ່ລາຊະ-
ໂຣຜູ້ທີ່ພຣະອົງຊົງບັນດານໃຫ້ຟື້ນຄືນຈາກຄວາມຕາຍອາໄສຢູ່. 2ພວກເຂົາໄດ້ຈັດຕຽມອາຫານແລງໃຫ້ພຣະອົງທີ່ນັ້ນ, ແລະມາ-
ທາກຳລັງຮັບໃຊ້ພຣະອົງ, ລາຊະໂຣເປັນຜູ້ໜຶ່ງທ່າມກາງຄົນເຫລົ່ານັ້ນ ທີ່ກຳລັງຮ່ວມຮັບປະທານຢູ່ກັບພຣະເຢຊູ. 3ແລ້ວມາຣີ-
ອາກໍເອົານ້ຳມັນຫອມຈຳນວນໜຶ່ງລິດ ຊຶ່ງເຮັດພະລິດມາຈາກນ້ຳມັນນາດາບໍຣິສຸດແລະລາຄາແພງ, ເທລົງທີ່ພຣະບາດຂອງພຣະເຢຊູ,
ແລະເອົາຜົມຂອງນາງເຊັດພຣະບາດພຣະອົງ. ໃນເຮືອນກໍຫອມກຸ້ມເຕັມໄປດ້ວຍກິ່ນຫອມຈາກນ້ຳມັນຫອມນັ້ນ.

4ຢູດາອິສະກາຣີອົດ, ໜຶ່ງໃນສາວົກຂອງພຣະອົງ, ຄົນທີ່ຈະທໍຣະຍົດພຣະອົງກ່າວວ່າ, 5"ເປັນຫຍັງບໍ່ເອົານ້ຳ-
ມັນນີ້ໄປຂາຍເພື່ອໄດ້ເງິນສາມຮ້ອຍເດນາຣິອົນ ແລ້ວເອົາໄປແຈກຢາຍໃຫ້ຄົນຍາກຈົນ?" 6ລາວເວົ້າຢ່າງນີ້ ບໍ່ແມ່ນເພາະລາວເອົາໃຈ-
ໃສ່ຕໍ່ຄົນຍາກຈົນ, ແຕ່ເພາະລາວເປັນຂະໂມຍ: ລາວດູແລຖົງເງິນ ແລະລາວລັກເງິນທີ່ໃສ່ໄວ້ໃນນັ້ນ.
7ພຣະເຢຊູກ່າວວ່າ, "ປ່ອຍໃຫ້ນາງເກັບສິ່ງທີ່ນາງມີໄວ້ ເພື່ອມື້ທີ່ຝັງສົບຂອງເຮົາເຖີດ. 8ຄົນຍາກຈົນຈະຢູ່ກັບພວກເຈົ້າສະເໝີ.
ແຕ່ເຮົາຈະບໍ່ໄດ້ຢູ່ກັບພວກທ່ານສະເໝີໄປ."
9ແລ້ວພວກຄົນຢິວກຸ່ມໃຫຍ່ກໍຮູ້ວ່າພຣະເຢຊູປະທັບຢູ່ທີ່ນັ້ນ, ແລະພວກເຂົາກໍມາ, ບໍ່ໄດ້ມາເພື່ອພຣະເຢຊູເທົ່ານັ້ນ, ແຕ່ເພື່ອມາເບິ່ງລາຊະໂຣ,
ຜູ້ທີ່ພຣະເຢຊູຊົງບັນດານໃຫ້ເປັນຄືນມາຈາກຄວາມຕາຍ. 10ພວກຫົວໜ້າປະໂລຫິດຮ່ວມວາງແຜນເພື່ອທີ່ພວກເຂົາຈະຂ້າລາຊະໂຣດ້ວຍ.
11ເພາະວ່າລາວເປັນເຫດໃຫ້ຄົນຢິວຫລາຍໆ ຄົນອອກໄປຈາກຄຳສອນຂອງພວກເຂົາ ແລະມາເຊື່ອໃນພຣະເຢຊູ.
12ໃນວັນຕໍ່ມາ ມີຝູງປະຊາຊົນຂະໜາດໃຫຍ່ມາທີ່ງານເທສະການ. ເມື່ອພວກເຂົາໄດ້ຍິນວ່າພຣະເຢຊູກຳລັງສະເດັດມາທີ່ນະຄອນເຢຣູຊາເລັມ.
13ພວກເຂົາກໍພາກັນນຳເອົາໃບຕົ້ນຕານແລະອອກໄປພົບພຣະອົງ ແລະ ຮ້ອງສຽງດັງວ່າ, "ໂຮຊັນນາ! ຂໍໃຫ້ພຣະອົງຜູ້ສະເດັດມາໃນພຣະ-
ນາມຂອງອົງພຣະຜູ້ເປັນເຈົ້າ, ກະສັດຂອງຊົນຊາດອິສຣາເອນ ຈົ່ງຈະເຣີນ."
14ພຣະອົງຊົງພົບລໍໜຸ່ມໂຕໜຶ່ງແລະຂີ່ນຂີ່ລໍນັ້ນ; ຕາມມີຄຳຂຽນໄວ້ວ່າ, 15"ຢ່າຢ້ານເລີຍ, ບຸດຍິງຂອງຊີໂອນ; ເບິ່ງແມ,
ກະສັດຂອງທ່ານມາເຖິງແລ້ວ, ຄືຜູ້ປະທັບເທິງລໍໜຸ່ມນັ້ນ."
16ຕອນທຳອິດພວກສາວົກຂອງພຣະອົງຍັງບໍ່ໄດ້ເຂົ້າໃຈເຫດການເຫລົ່ານີ້; ແຕ່ເມື່ອພຣະເຢຊູຊົງຮັບກຽດຕິຍົດແລ້ວ, ພວກເຂົາຈຶ່ງຣະ-
ນຶກເຖິງສິ່ງຕ່າງໆ ທີ່ມີຂຽນບັນທຶກໄວ້ກ່ຽວກັບພຣະອົງໄດ້ ແລະທີ່ຄົນທັງຫລາຍໄດ້ເຮັດສິ່ງເຫລົ່ານີ້ເພື່ອພຣະອົງ.
17ຝູງຄົນທີ່ຢູ່ກັບພຣະອົງຕອນທີ່ພຣະອົງຊົງເອີ້ນລາຊະໂຣໃຫ້ອອກມາຈາກອຸໂມງ ແລະຟື້ນຄືນມາຈາກຄວາມຕາຍກໍໄດ້ເປັນພະຍານ.
18ແລະເພາະເຫດນີ້ປະຊາຊົນຈຶ່ງໄປຫາພຣະອົງ, ເພາະວ່າພວກເຂົາໄດ້ຍິນພຣະອົງຊົງເຮັດໝາຍສຳຄັນຫລາຍຢ່າງ. 19ພວກຟາຣີ-
ຊາຍຈຶ່ງເວົ້າທ່າມກາງພວກເຂົາວ່າ, "ເຫັນບໍ ທ່ານເຮັດອັນໃດບໍ່ໄດ້ເລີຍ; ເບິ່ງແມ, ໂລກນີ້ໄດ້ຕິດຕາມມັນໄປແລ້ວ."
20ໃນບັນດາຄົນທີ່ຂຶ້ນໄປນະມັດສະການທີ່ງານເທສະການ ກໍມີພວກຊາວກຣີກພວກໜຶ່ງ. 21ຄົນເຫລົ່ານີ້ໄປຫາຟີລິບ ຊຶ່ງມາຈາກບ້ານເບັດຊາອີ-
ດາແຂວງຄາລີເລ ໂດຍຖາມທ່ານວ່າ, "ທ່ານເຈົ້າເອີຍ, ພວກເຮົາຕ້ອງການພົບພຣະເຢຊູ." 22ຟີລິບຈຶ່ງໄປບອກອັນເດອາ; ແລ້ວອັນເດອາຈຶ່ງໄປກັບຟີ-
ລິບເພື່ອໄປທູນພຣະເຢຊູ.
23ພຣະເຢຊູຕອບພວກເຂົາວ່າ, "ເວລາທີ່ບຸດມະນຸດຈະຮັບກຽດກໍມາເຖິງແລ້ວ. 24ເຮົາບອກຄວາມຈິງແກ່ທ່ານວ່າ,
ຖ້າເມັດເຂົ້າບໍ່ຕົກເຂົ້າມາໃນໂລກນີ້ແລະບໍ່ຕາຍໄປ ຈະຍັງຄົງຢູ່ເຫລືອເມັດດຽວ; ແຕ່ຖ້າມັນຕາຍລົງໃນດິນ ກໍຈະເກີດຜົນຫລາຍ.
25ຜູ້ທີ່ຮັກຊີວິດຂອງຕົນກໍຈະສູນເສັຽຊີວິດ; ແຕ່ຖ້າຜູ້ກຽດຊັງຊີວິດໃນໂລກນີ້ ເຂົາຈະໄດ້ຮັບຊີວິດນິຣັນ. 26ຖ້າຜູ້ໃດປະຕິບັດເຮົາ ໃຫ້ຜູ້ນັ້ນຕິດ-
ຕາມເຮົາມາ ແລະບໍ່ວ່າເຮົາຢູ່ທີ່ໃດ ຜູ້ຮັບໃຊ້ເຮົາຈະຢູ່ທີ່ນັ້ນເໝືອນກັນ. ຖ້າຜູ້ໃດປະຕິບັດເຮົາ ພຣະບິດາກໍຈະໃຫ້ກຽດຜູ້ນັ້ນ.
27"ຕອນນີ້ໃຈເຮົາເປັນທຸກຫລາຍ ເຮົາຈະວ່າຢ່າງໃດດີ? 'ພຣະບິດາ, ຂໍຊົງຊ່ວຍກູ້ຂ້າພຣະອົງຈາກຍາມນີ້ຖ້ອນ?'
ແຕ່ນີ້ຄືເຫດຜົນທີ່ຂ້າພຣະອົງໄດ້ເຂົ້າມາໃນໂລກໃນເວລານີ້. 28ພຣະບິດາ, ຂໍໃຫ້ພຣະນາມຂອງພຣະອົງຊົງໄດ້ຮັບກຽດ."
ແລ້ວມີສຽງມາຈາກສະຫວັນກ່າວວ່າ, "ເຮົາໄດ້ໃຫ້ຮັບກຽດນັ້ນ ແລະເຮົາຈະໃຫ້ຮັບກຽດອີກ." 29ແລ້ວຝູງຄົນທີ່ຢືນຢູ່ໃກ້ໆກໍເວົ້າວ່າເປັນສຽງຟ້າ-
ຮ້ອງ. ບາງຄົນກໍເວົ້າວ່າ, "ເທວະດາໄດ້ສົນທະນາກັບທ່ານ."
30ພຣະເຢຊູຕອບວ່າ, "ສຽງບໍ່ໄດ້ມາສຳລັບເຮົາ, ແຕ່ສຳລັບທ່ານທັງຫລາຍ. 31ເວລານີ້ເປັນການພິພາກສາຂອງໂລກນີ້: ເປັນເວລາທີ່ຜູ້ປົກ-
ຄອງໂລກນີ້ຈະຖືກໂຍນອອກໄປ.
32ແລະເມື່ອເຮົາຖືກຍົກຂຶ້ນຈາກໂລກນີ້ແລ້ວ, ເຮົາກໍຈະນຳທຸກຄົນເຂົ້າມາຫາເຮົາ." 33ພຣະອົງກ່າວດັ່ງນີ້ເພື່ອສະແດງວ່າພຣະອົງຈະສິ້ນພຣະ-
ຊົນຢ່າງໃດ.
34ຝູງຄົນຕອບພຣະອົງວ່າ, "ພວກເຮົາໄດ້ຍິນຈາກພຣະບັນຍັດແລ້ວວ່າ ພຣະຄຣິດຈະຢູ່ຕະຫລອດໄປເປັນນິດ. ແລ້ວທ່ານກ່າວໄດ້ຢ່າງໃດວ່າ
'ພຣະບຸດຈະຕ້ອງຖືກຍົກຂຶ້ນ?' ບຸດມະນຸດນັ້ນຄືຜູ້ໃດກັນແທ້?" 35ພຣະເຢຊູຕອບເຂົາວ່າ, "ຄວາມສະຫວ່າງຈະຍັງຢູ່ກັບພວກທ່ານອີກໜ້ອຍໜຶ່ງ.
ຈົ່ງຍ່າງໃນຂະນະທີ່ທ່ານຍັງມີຄວາມສະຫວ່າງຢູ່, ເພື່ອທີ່ຄວາມມືດຈະໄລ່ຕາມທ່ານບໍ່ທັນ.
ເພາະຜູ້ທີ່ຍ່າງໃນຄວາມມືດນັ້ນບໍ່ຮູ້ວ່າຕົນກຳລັງໄປທາງໃດ. 36ໃນຂະນະທີ່ທ່ານຍັງມີຄວາມສະຫວ່າງຢູ່ນັ້ນ,
ຈົ່ງເຊື່ອໃນຄວາມສະຫວ່າງເພື່ອທີ່ທ່ານຈະໄດ້ເປັນລູກຂອງຄວາມສະຫວ່າງດ້ວຍ." ເມື່ອພຣະເຢຊູກ່າວສິ່ງເຫລົ່ານີ້ແລ້ວ
ພຣະອົງກໍສະເດັດອອກໄປແລະຫລີກໂຕເອງຈາກພວກເຂົາ.
37ເຖິງແມ່ນວ່າພຣະອົງໄດ້ເຮັດໝາຍສຳຄັນຫລາຍປະການແກ່ພວກເຂົາ, ແຕ່ພວກເຂົາກໍຍັງບໍ່ເຊື່ອພຣະອົງ.
38ເພື່ອໃຫ້ເປັນໄປຕາມທີ່ຜູ້ປະກາດພຣະທັມ ເອຊາຢາໄດ້ກ່າວໄວ້ວ່າ, "ອົງພຣະຜູ້ເປັນເຈົ້າ, ຈະມີຜູ້ໃດເຊື່ອໃນສິ່ງທີ່ຂ້ານ້ອຍບອກ? ແລະພຣະ-
ກອນຂອງພຣະອົງໄດ້ສະແດງແກ່ຜູ້ໃດ?"
39ເພາະເຫດນີ້ພວກເຂົາຈຶ່ງບໍ່ເຊື່ອ, ດ້ວຍເອຊາຢາກ່າວໄວ້ອີກວ່າ, 40"ພຣະອົງເຮັດໃຫ້ເຂົາຕາບອດ, ແລະໃຫ້ຈິດໃຈຂອງເຂົາແຂງກະດ້າງໄປ;
ບໍ່ດັ່ງນັ້ນພວກເຂົາຈະເຫັນດ້ວຍຕາແລະເຂົ້າໃຈດ້ວຍຫົວໃຈຂອງພວກເຂົາ, ແລ້ວຫັນກັບມາເພື່ອໃຫ້ເຮົາຮັກສາພວກເຂົາໃຫ້ເຊົາດີ."
41ເອຊາຢາໄດ້ກ່າວດັ່ງນີ້ເພາະວ່າທ່ານໄດ້ເຫັນພຣະສະຫງ່າຣາສີຂອງພຣະເຢຊູ ແລະກ່າວເຖິງພຣະອົງ. 42ຢ່າງໃດກໍດີ
ມີເຈົ້ານາຍຫລວງຫລາຍໄດ້ເຊື່ອໃນພຣະເຢຊູ; ແຕ່ເປັນເພາະພວກຟາຣີຊາຍ,


generated on Tue Jun 17 19:01:42 2025

ພວກເຂົາຈຶ່ງບໍ່ເປີດເຜີຍຕົວເພື່ອທີ່ພວກເຂົາຈະບໍ່ຖືກໄລ່ອອກຈາກໂຮງທັມະເທສະໜາ.[43]ພວກເຂົານັກການຍົກຍ້ອງຈາກມະນຸດ
ຫລາຍກວ່າການຍົກຍ້ອງທີ່ມາຈາກພຣະເຈົ້າ.
[44]ພຣະເຢຊູຊົງເປັ່ງສຽງດັງແລະກ່າວວ່າ, “ຜູ້ທີ່ເຊື່ອໃນເຮົາ, ເຂົາບໍ່ໄດ້ເຊື່ອໃນເຮົາເທົ່ານັ້ນ ແຕ່ເຊື່ອໃນຜູ້ທີ່ສົ່ງເຮົາມາດ້ວຍ.
[45]ແລະຜູ້ທີ່ເຫັນເຮົາກໍຈະໄດ້ເຫັນພຣະອົງຜູ້ທີ່ສົ່ງເຮົາມາດ້ວຍ.
[46]ເຮົາໄດ້ເຂົ້າມາເປັນຄວາມສະຫວ່າງໃນໂລກນີ້, ເພື່ອຄົນທີ່ເຊື່ອໃນເຮົາຈະບໍ່ໄດ້ຢູ່ໃນຄວາມມືດອີກ.
[47]ຖ້າຜູ້ໃດໄດ້ຍິນຖ້ອຍຄໍາຂອງເຮົາແຕ່ບໍ່ປະຕິບັດຕາມ, ເຮົາຈະບໍ່ພິພາກສາຜູ້ນັ້ນ; ເພາະເຮົາບໍ່ໄດ້ມາເພື່ອພິພາກສາໂລກນີ້,
ແຕ່ມາເພື່ອຊ່ວຍໂລກນີ້ໃຫ້ລອດ.
[48]ຜູ້ທີ່ປະຕິເສດເຮົາແລະຜູ້ທີ່ບໍ່ຮັບເອົາຖ້ອຍຄໍາຂອງເຮົາ, ຈະມີຜູ້ໜຶ່ງມາພິພາກສາເຂົາ. ຄືຖ້ອຍຄໍາເຫລົ່ານັ້ນທີ່ເຮົາໄດ້ກ່າວໄວ້ ຈະພິພາກ-
ສາເຂົາໃນວັນສຸດທ້າຍ.[49]ເພາະເຮົາບໍ່ໄດ້ກ່າວຕາມໃຈຂອງເຮົາເອງ, ແຕ່ເປັນພຣະບິດາຜູ້ສົ່ງເຮົາມາ,
ເປັນຜູ້ທີ່ບັນຊາວ່າອັນໃດຄວນເວົ້າແລະອັນໃດທີ່ເຮົາຄວນກ່າວ.[50]ເຮົາຮູ້ວ່າພຣະບັນຊາຂອງພຣະອົງນັ້ນຄືຊີວິດອັນຕະຫລອດໄປເປັນນິດ, ດັ່ງ-
ນັ້ນເຮົາຈຶ່ງເວົ້າວ່າ ພຣະບິດາທີ່ໄດ້ເວົ້າກັບເຮົາຢ່າງໃດ, ເຮົາກໍເວົ້າຢ່າງນັ້ນ.”


generated on Tue Jun 17 19:01:42 2025

13 [1]ກ່ອນເຖິງເທສະການປັດສະຄາ. ເມື່ອພຣະເຢຊູຊົງຊາບວ່າໃກ້ເຖິງເວລາທີ່ພຣະອົງຈະສະເດັດຈາກໂລກນີ້ເພື່ອໄປຫາພຣະບິດາ. ພຣະ-
ອົງຊົງຮັກຄົນຂອງພຣະອົງທີ່ຢູ່ໃນໂລກນີ້ມາຢ່າງໃດ, ແລະພຣະອົງກໍຊົງຮັກຈົນເຖິງທີ່ສຸດ.[2]ບັດນີ້ ມານໄດ້ດົນໃຈຢູດາ ອິສະກາຣີອົດ
ລູກຂອງຊີໂມນໃຫ້ທໍຣະຍົດຕໍ່ພຣະເຢຊູ.

[3]ພຣະອົງຊົງຮູ້ວ່າພຣະບິດາໄດ້ມອບທຸກສິ່ງໄວ້ໃນພຣະຫັດຂອງພຣະອົງ ແລະທີ່ພຣະອົງຊົງມາຈາກພຣະເຈົ້າ ແລະກຳລັງຈະສະ-
ເດັດກັບໄປຫາພຣະເຈົ້າ.[4]ພຣະອົງຊົງລຸກຂຶ້ນຈາກໂຕະອາຫານຂອງພຣະອົງ, ແລະຖອດເຄື່ອງທົງຊັ້ນນອກຂອງພຣະອົງອອກ.
ພຣະອົງຊົງຈັບເອົາຜ້າເຊັດຕົວແລະຮັດແອວພຣະອົງໄວ້.[5]ແລ້ວພຣະອົງຊົງຖອກນ້ຳໃສ່ອ່າງນ້ຳແລະເລີ່ມລ້າງຕີນຂອງພວກສາວົກຂອງພຣະອົງ
ແລະເຊັດດ້ວຍຜ້າທີ່ພຣະອົງຊົງຮັດແອວໄວ້ນັ້ນ.
[6]ເມື່ອພຣະອົງມາເຖິງຊີໂມນເປໂຕ ແລະເປໂຕທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ພຣະອົງຈະລ້າງຕີນຂອງຂ້ານ້ອຍດ້ວຍຫລື?”[7]ພຣະ-
ເຢຊູຕອບລາວວ່າ, “ສິ່ງທີ່ເຮົາກຳລັງເຮັດຢູ່ນີ້ທ່ານຍັງບໍ່ເຂົ້າໃນຕອນນີ້, ແຕ່ທ່ານຈະເຂົ້າໃຈພາຍຫລັງ.”[8]ເປໂຕຕອບພຣະອົງວ່າ,
“ພຣະອົງຈະບໍ່ໄດ້ລ້າງຕີນຂອງຂ້ານ້ອຍ” ພຣະເຢຊູຕອບລາວວ່າ, “ຖ້າເຮົາບໍ່ໄດ້ລ້າງຕີນໃຫ້ທ່ານ, ທ່ານຈະບໍ່ໄດ້ມີສ່ວນໃນເຮົາ.”[9]ຊີໂມນເປ-
ໂຕຕອບພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ບໍ່ແມ່ນແຕ່ຕີນຂອງຂ້ານ້ອຍເລີຍ, ແຕ່ຂໍລ້າງມືແລະຫົວຂອງຂ້ານ້ອຍດ້ວຍ.”
[10]ພຣະເຢຊູກ່າວແກ່ລາວວ່າ, “ຜູ້ໃດທີ່ອາບນ້ຳແລ້ວບໍ່ຈຳເປັນລ້າງຕົວອີກ, ຍົກເວັ້ນແຕ່ຕີນຂອງເຂົາທີ່ຕ້ອງລ້າງ; ເຂົາກໍສະອາດພຽງພໍແລ້ວ,
ທ່ານກໍສະອາດແລ້ວ ແຕ່ບໍ່ແມ່ນທຸກຄົນ.”[11](ພຣະອົງຊົງຮູ້ວ່າໃຜຈະທໍຣະຍົດພຣະອົງ; ນັ້ນຈຶ່ງເປັນເຫດທີ່ພຣະອົງກ່າວວ່າ, “ບໍ່ແມ່ນທຸກຄົນທີ່ສະ-
ອາດ.”)
[12]ເມື່ອພຣະອົງໄດ້ລ້າງຕີນໃຫ້ພວກສາວົກຂອງພຣະອົງສຳເລັດ ແລະ ເອົາເສື້ອທົງຊັ້ນນອກຂອງພຣະອົງມາໃສ່ແລະນັ່ງລົງອີກຄັ້ງ,
ພຣະອົງກ່າວແກ່ພວກເຂົາວ່າ, “ທ່ານຮູ້ບໍ່ວ່າເຮັດໄດ້ເຮັດອັນໃດໃຫ້ກັບພວກທ່ານ?[13]ທ່ານເອີ້ນເຮົາວ່າ 'ອາຈານ' ແລະ 'ອົງພຣະຜູ້ເປັນເຈົ້າ,'
ທ່ານເອີ້ນຖືກແລ້ວ, ເພາະເຮົາຄືຜູ້ນັ້ນແຫລະ.[14]ຖ້າເຊັ່ນນັ້ນ ຫາກເຮົາຊຶ່ງເປັນອົງພຣະຜູ້ເປັນເຈົ້າແລະອາຈານຂອງທ່ານ ໄດ້ລ້າງຕີນຂອງທ່ານ,
ທ່ານກໍຄວນຈະລ້າງຕີນຂອງກັນແລະກັນດ້ວຍ.[15]ເພາະເຮົາໄດ້ວາງແບບຢ່າງໃຫ້ພວກທ່ານເພື່ອທ່ານຈະໄດ້ປະຕິບັດເຊັ່ນດຽວກັນ
ກັບທີ່ເຮົາໄດ້ເຮັດໃຫ້ກັບທ່ານ.
[16]ເຮົາບອກຄວາມຈິງແກ່ທ່ານວ່າ, ຂ້າໃຊ້ຈະບໍ່ເປັນໃຫຍ່ກວ່ານາຍ; ແລະຜູ້ສົ່ງຂ່າວກໍບໍ່ເປັນໃຫຍ່ໄປກວ່າຜູ້ທີ່ສົ່ງເຂົາໄປ.
[17]ຫາກທ່ານເຂົ້າໃຈສິ່ງເຫລົ່ານີ້ ຖ້າທ່ານເຮັດຕາມທ່ານຈະໄດ້ຮັບພອນ.[18]ເຮົາບໍ່ເວົ້າເຖິງທ່ານທັງໝົດ ເຮົາຮູ້ຈັກຜູ້ທີ່ເຮົາໄດ້ເລືອກ
ແຕ່ທີ່ເປັນເປັນເຊັ່ນນີ້ກໍເພື່ອໃຫ້ພຣະຄັມສົມບູນ: ‘ຜູ້ທີ່ຮັບປະທານອາຫານຂອງເຮົາຄືຜູ້ທີ່ຈະຍົກສົ້ນຕີນຕໍ່ຕ້ານເຮົາ.’
[19]ເຮົາບອກເລື່ອງນີ້ແກ່ທ່ານກ່ອນທີ່ສິ່ງເຫລົ່ານີ້ຈະເກີດຂຶ້ນ, ເພື່ອວ່າທ່ານຈະເຊື່ອວ່າ ເຮົາເປັນ.[20]ເຮົາບອກຄວາມຈິງກັບທ່ານວ່າ,
ຜູ້ໃດກໍຕາມທີ່ຮັບຜູ້ທີ່ເຮົາສົ່ງໄປ, ກໍຈະຮັບເຮົາດ້ວຍ, ແລະຜູ້ໃດທີ່ຮັບເຮົາ, ເຂົາກໍຈະຮັບພຣະອົງຜູ້ທີ່ສົ່ງເຮົາມາ.”
[21]ເມື່ອພຣະເຢຊູຊົງກ່າວສິ່ງເຫລົ່ານີ້, ພຣະອົງກໍເປັນທຸກຫລາຍໃນວິນຍານຂອງພຣະອົງ. ພຣະອົງໄດ້ເປັນພະຍານແລະກ່າວວ່າ,
“ເຮົາບອກຄວາມຈິງແກ່ທ່ານວ່າ ຄົນໜຶ່ງໃນພວກທ່ານຈະທໍຣະຍົດເຮົາ.”[22]ພວກສາວົກກໍເລີ່ມເບິ່ງໜ້າກັນແລະສົງສັຍວ່າພຣະອົງກ່າວເຖິງຜູ້ໃດ.
[23]ໜຶ່ງໃນສາວົກຂອງພຣະອົງ, ຜູ້ທີ່ພຣະອົງຊົງຮັກທີ່ສຸດ, ກຳລັງເນີ້ງກາຍຢູ່ຂ້າງໆ ໂຕະອາຫານເຖິງພຣະຊວງຂອງພຣະອົງ.[24]ຊີໂມນເປ-
ໂຕຈຶ່ງຍົກໜ້າໃສ່ສາວົກຜູ້ນັ້ນກ່າວວ່າ, “ບອກເຮົາເຖີ້ນວ່າທີ່ພຣະອົງກ່າວນັ້ນແມ່ນຜູ້ໃດ.”[25]ລາວກໍເອນຢູ່ໃກ້ກັບພຣະເຢຊູແລະເວົ້າວ່າ,
“ອົງພຣະຜູ້ເປັນເຈົ້າ, ຜູ້ນັ້ນແມ່ນຜູ້ໃດ?”
[26]ແລ້ວພຣະເຢຊູຊົງຕອບລາວວ່າ, “ຄືຄົນທີ່ເຮົາຈະເອົາເຂົ້າຈ້ຳແລ້ວຍື່ນໃຫ້ແກ່ລາວ” ເມື່ອພຣະອົງເອົາເຂົ້າຈີ່ຈ້ຳແລ້ວ, ພຣະອົງຊົງຍື່ນໃຫ້ແກ່ຢູ-
ດາລູກຊີໂມນອິສະກາຣີອົດ.[27]ຫລັງຈາກນັ້ນ ເມື່ອລາວໄດ້ກິນເຂົ້າຈີ່ຄຳນັ້ນແລ້ວ, ຊາຕານກໍເຂົ້າສິງລາວ, ແລ້ວພຣະເຢຊູບອກວ່າ,
“ທ່ານຈະເຮັດອັນໃດ ກໍຈົ່ງເຮັດໄວ ແມ.”
[28]ໃນຂະນະທີ່ທຸກຄົນກຳລັງນັ່ງຮ່ວມໂຕະຢູ່ ບໍ່ມີຜູ້ໃດຮູ້ວ່າເປັນຫຍັງພຣະເຢຊູຈຶ່ງກ່າວກັບລາວຢ່າງນັ້ນ.[29]ບາງຄົນຄິດວ່າ, ເພາະຢູດາຖືຖົງເງິນ,
ພຣະເຢຊູຈຶ່ງກ່າວກັບລາວວ່າ, “ຈົ່ງຊື້ສິ່ງທີ່ເຮົາຕ້ອງການສຳລັບງານເທສະການ” ຫລືທ່ານຈົ່ງໃຫ້ບາງສິ່ງແກ່ຄົນຍາກຈົນ.[30]ຫລັງຈາກທີ່ຢູ-
ດາໄດ້ຮັບເຂົ້າຈີ່ແລ້ວ, ລາວກໍອອກໄປທັນທີ. ຕອນນັ້ນເປັນເວລາກາງຄືນ.
[31]ເມື່ອຢູດາອອກໄປແລ້ວ, ພຣະເຢຊູກໍກ່າວວ່າ, “ເຖິງເວລາແລ້ວທີ່ບຸດມະນຸດຈະໄດ້ຮັບກຽດຕິຍົດ, ແລະພຣະເຈົ້າຈະໄດ້ຮັບກຽດຕິ-
ຍົດໃນບຸດມະນຸດ.[32]ພຣະເຈົ້າຈະໄດ້ຮັບກຽດຕິຍົດໃນຕົວຂອງທ່ານຜູ້ນັ້ນ, ແລະພຣະອົງຈະໃຫ້ບຸດມະນຸດໄດ້ຮັບກຽດຕິຍົດໃນທັນທີ.[33]ລູກ-
ນ້ອຍທັງຫລາຍ, ເຮົາຈະຢູ່ກັບທ່ານອີກໜ້ອຍໜຶ່ງ. ພວກເຈົ້າຈະຊອກຫາເຮົາ, ແລະເໝືອນກັບເຮົາໄດ້ບອກກັບພວກຢິວ, ‘ບ່ອນເຮົາຈະໄປນັ້ນ
ພວກເຈົ້າໄປບໍ່ໄດ້’, ຕອນນີ້ເຮົາກໍບອກພວກເຈົ້າເຊັ່ນນີ້ດ້ວຍ.
[34]ເຮົາໃຫ້ບັນຍັດໃໝ່ໄວ້ແກ່ທ່ານ, ທ່ານຈົ່ງຮັກເຊິ່ງກັນແລະກັນ; ຢ່າງທີ່ເຮົາໄດ້ຮັກທ່ານ, ດັ່ງນັ້ນທ່ານກໍຈົ່ງຮັກກັນແລະກັນດ້ວຍ.
[35]ດ້ວຍເຫດນີ້ທຸກຄົນຈະຮູ້ວ່າທ່ານເປັນສາວົກຂອງເຮົາ, ຖ້າທ່ານຮັກເຊິ່ງກັນແລະກັນ.”
[36]ຊີໂມນເປໂຕໄດ້ທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ທ່ານຈະສະເດັດໄປໃສ?” ພຣະເຢຊູຊົງຕອບວ່າ, “ບ່ອນທີ່ເຮົາຈະໄປນັ້ນ,
ທ່ານຕາມເຮົາໄປບໍ່ໄດ້, ແຕ່ທ່ານຈະຕາມເຮົາໄປໃນພາຍຫລັງ.”[37]ເປໂຕທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ເປັນຫຍັງຈຶ່ງຕາມພຣະອົງໄປຕອນ-
ນີ້ບໍ່ໄດ້? ຂ້ານ້ອຍຈະສະຫລະຊີວິດນີ້ຖວາຍແດ່ພຣະອົງ.”[38]ພຣະເຢຊູຕອບວ່າ, “ທ່ານຈະສະຫລະຊີວິດຂອງທ່ານໃຫ້ເຮົາຫລື?
ເຮົາບອກແກ່ທ່ານວ່າ, ກ່ອນໄກ່ຂັນທ່ານຈະປະຕິເສດເຮົາສາມເທື່ອ.”

14 1“ຢ່າໃຫ້ໃຈຂອງທ່ານເປັກທຸກເລີຍ. ຖ້າທ່ານເຊື່ອໃນພຣະເຈົ້າ, ທ່ານກໍເຊື່ອໃນເຮົາດ້ວຍ. 2ໃນຜາສາດຂອງພຣະບິດາຂອງເຮົານັ້ນມີທີ່-
ຢູ່ຫລວງຫລາຍ. ຖ້າບໍ່ມີ, ເຮົາຄົງບອກພວກທ່ານ, ເຮົາຈະໄປຈັດແຈ່ງບ່ອນໄວ້ສຳລັບທ່ານ. 3ຖ້າເຮົາໄປຈັດແຈ່ງບ່ອນໄວ້ສຳລັບພວກທ່ານ,
ເຮົາຈະກັບມາອີກແລະຮັບທ່ານໄປຢູ່ກັບເຮົາ, ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນດ້ວຍ.

4ທ່ານຮູ້ຈັກທາງທີ່ເຮົາກຳລັງຈະໄປ.” 5ໂທມາທູນພຣະເຢຊູວ່າ, “ອົງພຣະຜູ້ເປັນເຈົ້າ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານກຳລັງຈະໄປໃສ, ຂ້ານ້ອຍຈະຮູ້-
ຈັກທາງນັ້ນໄດ້ຢ່າງໃດ?” 6ພຣະເຢຊູຕອບລາວວ່າ, “ເຮົາເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ; ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກ-
ຈາກຈະຜ່ານທາງເຮົາ. 7ຖ້າທ່ານຮູ້ຈັກເຮົາ, ທ່ານກໍຈະຮູ້ຈັກພຣະບິດາຂອງເຮົາດ້ວຍ. ຈາກນີ້ເປັນຕົ້ນໄປ ທ່ານຮູ້-
ຈັກພຣະບິດາແລະໄດ້ເຫັນພຣະອົງແລ້ວ.”
8ຟີລິບທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ຂໍຊົງສະແດງພຣະບິດາແກ່ພວກຂ້ານ້ອຍແດ່ທ້ອນ, ນັ້ນກໍເປັນທີ່ເພິ່ງພໍໃຈແກ່ພວກຂ້າ-
ນ້ອຍແລ້ວ.” 9ພຣະເຢຊູຕອບລາວວ່າ, “ຟີລິບເອີຍ, ເຮົາໄດ້ຢູ່ກັບພວກທ່ານມາດົນນານຫລາຍແລະທ່ານກໍຍັງບໍ່ຮູ້ຈັກເຮົາ?
ຜູ້ໃດກໍຕາມທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາ, ທ່ານເວົ້າໄດ້ຢ່າງໃດວ່າ, ‘ຂໍຊົງສຳແດງພຣະບິດາ?’
10ທ່ານບໍ່ເຊື່ອວ່າເຮົາຢູ່ໃນພຣະບິດາ ແລະພຣະບິດາຊົງຢູ່ໃນເຮົາຫລື? ຖ້ອຍຄຳທີ່ເຮົາກ່າວແກ່ທ່ານ ເຮົາບໍ່ໄດ້ກ່າວໂດຍສິດອຳນາດຂອງເຮົາເອງ,
ແຕ່ເປັນພຣະບິດາຜູ້ຊົງສະຖິດຢູ່ໃນເຮົາແລະກຳລັງທຳງານຂອງພຣະອົງ. 11ຈົ່ງເຊື່ອເຮົາເຖີດວ່າເຮົາຢູ່ໃນພຣະບິດາ, ແລະພຣະບິດາຊົງຢູ່ໃນເຮົາ,
ຫລືບໍ່ດັ່ງນັ້ນ ກໍຈົ່ງເຊື່ອເພາະການງານທັງຫລາຍເຫລົ່ານັ້ນ.
12ເຮົາບອກຄວາມຈິງແກ່ທ່ານວ່າ, ຜູ້ທີ່ເຊື່ອໃນເຮົາຈະເຮັດງານທີ່ເຮົາເຮັດ, ແລະຜູ້ນັ້ນຈະເຮັດງານທີ່ຍິ່ງໃຫຍ່ກວ່ານີ້ ເພາະ-
ວ່າເຮົາກຳລັງຈະໄປຫາພຣະບິດາ. 13ສິ່ງໃດກໍຕາມທີ່ທ່ານຂໍໃນນາມຂອງເຮົາ, ເຮົາຈະເຮັດສິ່ງນັ້ນເພື່ອທີ່ພຣະບິດາຈະຊົງຮັບກຽດໃນພຣະບຸດ.
14ຖ້າທ່ານຂໍສິ່ງໃດໃນນາມຂອງເຮົາ, ເຮົາຈະເຮັດສິ່ງນັ້ນໃຫ້.
15“ຖ້າທ່ານຮັກເຮົາ, ທ່ານຈະຮັກສາບັນຍັດຂອງເຮົາ. 16ເຮົາຈະອະທິຖານຂໍຈາກພຣະບິດາ, ແລະພຣະອົງຈະຊົງປຣະທານອົງຜູ້ຊ່ອຍອີກທ່ານໜຶ່ງ,
ເພື່ອທີ່ພຣະອົງນັ້ນຈະໄດ້ຢູ່ກັບພວກທ່ານສະເໝີໄປ, 17ຄືພຣະວິນຍານແຫ່ງຄວາມຈິງ. ຜູ້ຊຶ່ງໂລກບໍ່ສາມາດຮັບໄວ້ໄດ້ ເພາະບໍ່ເຫັນແລະບໍ່ຮູ້-
ຈັກພຣະອົງ. ແຕ່ທ່ານຮູ້ຈັກພຣະອົງ, ເພາະພຣະອົງຊົງສະຖິດຢູ່ກັບທ່ານແລະຢູ່ໃນທ່ານ.
18“ເຮົາຈະບໍ່ປະຖິ້ມທ່ານໄວ້ພຽງລຳພັງ; ເຮົາຈະກັບມາຫາທ່ານ. 19ອີກໜ້ອຍໜຶ່ງໂລກນີ້ຈະບໍ່ເຫັນເຮົາ, ແຕ່ທ່ານຍັງຈະເຫັນເຮົາ.
ເພາະເຮົາຊົງເປັນຢູ່, ແລະທ່ານກໍຈະມີຊີວິດຢູ່ກັບເຮົາດ້ວຍ. 20ໃນວັນນັ້ນທ່ານຈະຮູ້ວ່າເຮົາຢູ່ໃນພຣະບິດາ, ແລະທ່ານກໍຢູ່ໃນເຮົາ,
ແລະເຮົາກໍຢູ່ໃນທ່ານ.
21ຜູ້ທີ່ມີບັນຍັດຂອງເຮົາແລະຖືຮັກສາບັນຍັດເຫລົ່ານັ້ນໄວ້ ຜູ້ນັ້ນກໍຄືຜູ້ທີ່ຮັກເຮົາ, ແລະຜູ້ທີ່ຮັກເຮົານັ້ນ ພຣະບິດາຂອງເຮົາຈະຊົງຮັກເຂົາດ້ວຍ,
ເຮົາຈະຮັກເຂົາ ແລະເຮົາຈະສຳແດງຕົວຂອງເຮົາໃຫ້ແກ່ເຂົາ.” 22ຢູດາ (ຊຶ່ງບໍ່ແມ່ນອິສະກາຣີອົດ) ທູນພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ,
ເປັນຫຍັງພຣະອົງຈຶ່ງສຳແດງຕົວພຣະອົງເອງແກ່ພວກຂ້ານ້ອຍ ແຕ່ບໍ່ສຳແດງຕໍ່ໂລກ?”
23ພຣະເຢຊູຕອບລາວວ່າ, “ຖ້າຜູ້ໃດຮັກເຮົາ, ເຂົາຈະຮັກສາຖ້ອຍຄຳຂອງເຮົາ. ພຣະບິດາຂອງເຮົາຈະຮັກເຂົາ
ແລະເຮົາກັບພຣະບິດາຈະມາຫາເຂົາ ແລະເຮົາທັງສອງຈະຕັ້ງຢູ່ກັບເຂົາ. 24ຜູ້ທີ່ບໍ່ຮັກເຮົາ ກໍຈະບໍ່ຮັກສາຖ້ອຍຄຳຂອງເຮົາ, ຖ້ອຍຄຳທີ່ທ່ານໄດ້ຍິນ
ບໍ່ໄດ້ມາຈາກເຮົາ ແຕ່ມາຈາກພຣະບິດາຂອງເຮົາຜູ້ທີ່ສົ່ງເຮົາມາ.
25ເຮົາໄດ້ກ່າວສິ່ງເຫລົ່ານີ້ແກ່ທ່ານ, ໃນຂະນະທີ່ເຮົາຍັງຢູ່ກັບທ່ານ. 26ແຕ່ພຣະຜູ້ຊ່ອຍຄືພຣະວິນຍານບໍຣິສຸດຜູ້ທີ່ພຣະບິ-
ດາຈະສົ່ງມາໃນນາມຂອງເຮົາ ພຣະອົງຈະຊົງສອນທ່ານທັງຫລາຍໃນທຸກສິ່ງ ແລະຈະເຮັດໃຫ້ທ່ານຣະນຶກເຖິງທຸກສິ່ງທີ່ເຮົາໄດ້ເວົ້າໄວ້ແກ່ທ່ານ.
27ເຮົາມອບສັນຕິສຸກໄວ້ກັບທ່ານ; ຄືສັນຕິສຸກຂອງເຮົາ. ບໍ່ແມ່ນສັນຕິສຸກເໝືອນຢ່າງທີ່ໂລກໃຫ້. ຢ່າໃຫ້ໃຈຂອງທ່ານຕ້ອງທຸກແລະຢ່າຢ້ານເລີຍ.
28ທ່ານໄດ້ຍິນໃນສິ່ງທີ່ເຮົາກ່າວແກ່ທ່ານວ່າ, ‘ເຮົາຈະຈາກໄປແລະເຮົາຈະກັບມາຫາພວກທ່ານອີກ’ ຖ້າທ່ານຮັກເຮົາ, ທ່ານຈະຊົມຊື່ນຍິນ-
ດີເພາະເຮົາຈະໄປຫາພຣະບິດາ, ເພາະພຣະບິດາຊົງຍິ່ງໃຫຍ່ກວ່າເຮົາ. 29ດຽວນີ້ເຮົາໄດ້ບອກສິ່ງນີ້ແກ່ທ່ານກ່ອນທີ່ຈະເກີດຂຶ້ນ,
ເພາະວ່າເມື່ອເຫດການເຫລົ່ານີ້ເກີດຂຶ້ນ, ທ່ານຈະເຊື່ອ. 30ຕັ້ງແຕ່ນີ້ໄປເຮົາຈະບໍ່ສົນທະນາຫລາຍກັບພວກທ່ານ, ເພາະວ່າຜູ້ປົກຄອງໂລກຈະມາ.
ຜູ້ນັ້ນບໍ່ມີສິດອັນໃດກ່ຽວກັບເຮົາ, 31ແຕ່ເຮົາໄດ້ເຮັດຕາມທີ່ພຣະບິດາໄດ້ຊົງບັນຊາ, ເພື່ອໂລກຈະໄດ້ຮູ້ວ່າເຮົາຮັກພຣະບິດາ. ໃຫ້ພວກເຮົາພາ-
ກັນຈາກທີ່ນີ້ໄປເທາະ.”


generated on Tue Jun 17 19:01:42 2025

15 [1]“ເຮົາເປັນເຄືອອະງຸ່ນອັນແທ້, ແລະພຣະບິດາເປັນຜູ້ບົວລະບັດສວນ.[2]ພຣະອົງຊົງຊົງຕັດກິ່ງທຸກກິ່ງໃນເຮົາທີ່ບໍ່ເກີດຜົນ, ແລະພຣະ-
ອົງຊົງຕອນກິ່ງທຸກກິ່ງທີ່ເກີດຜົນ ເພື່ອທີ່ກິ່ງນັ້ນຈະເກີດຜົນຫລາຍຍິ່ງຂຶ້ນ.

[3]ທ່ານສະອາດບໍຣິສຸດແລ້ວເພາະພຣະທັມທີ່ເຮົາໄດ້ກ່າວກັບທ່ານ.[4]ຈົ່ງຢູ່ໃນເຮົາ, ແລະເຮົາຢູ່ໃນທ່ານ. ກໍເໝືອນກັບກິ່ງຈະເກີດຜົນເອງບໍ່ໄດ້ ນອກ-
ຈາກຈະຕິດຢູ່ກັບເຄືອ, ທ່ານເອງກໍຈະເກີດຜົນບໍ່ໄດ້, ນອກຈາກທ່ານຈະຢູ່ໃນເຮົາ.
[5]ເຮົາເປັນເຄືອອະງຸ່ນ, ທ່ານເປັນກິ່ງ. ຜູ້ທີ່ຢູ່ໃນເຮົາ ແລະເຮົາຢູ່ໃນເຂົາ, ຜູ້ນັ້ນຈະເກີດຜົນຫລາຍ, ເພາະຖ້າບໍ່ມີເຮົາເຂົາກໍເຮັດສິ່ງໃດບໍ່ໄດ້ເລີຍ.
[6]ຖ້າຜູ້ໃດບໍ່ໄດ້ຢູ່ໃນເຮົາ, ເຂົາຈະຖືກໂຍນຖິ້ມໄປເໝືອນກິ່ງທີ່ຫ່ຽວແຫ້ງ, ພວກເຂົາຈະເກັບຮວບຮວມກິ່ງເຫລົ່ານັ້ນແລະໂຍນເຂົ້າໄປໃນກອງໄຟ,
ແລະເຜົາໄຟເສັຽ.[7]ຖ້າທ່ານຢູ່ໃນເຮົາ, ແລະຖ້ອຍຄຳຂອງເຮົາຝັງຢູ່ໃນທ່ານ, ຈົ່ງທູນຂໍສິ່ງໃດກໍຕາມທີ່ທ່ານຈະປາຖນາ, ແລະທ່ານກໍຈະໄດ້ສິ່ງນັ້ນ.
[8]ພຣະບິດາຂອງເຮົາໄດ້ຊົງຮັບກຽດໃນສິ່ງນີ້, ເພາະເມື່ອທ່ານເກີດຜົນຫລາຍ ທ່ານກໍເປັນສາວົກຂອງເຮົາ.[9]ພຣະບິດາໄດ້ຊົງຮັກເຮົາຢ່າງໃດ,
ເຮົາກໍຮັກທ່ານຢ່າງນັ້ນ. ຈົ່ງຢູ່ໃນຄວາມຮັກຂອງເຮົາ.
[10]ຖ້າທ່ານເຮັດຕາມບັນຍັດຂອງເຮົາ, ທ່ານກໍຈະຢູ່ໃນຄວາມຮັກຂອງເຮົາ, ເຊັ່ນດຽວກັນກັບເຮົາໄດ້ເຮັດຕາມບັນຍັດພຣະບິດາຂອງເຮົາ
ແລະຢູ່ໃນຄວາມຮັກຂອງພຣະອົງ.[11]ເຮົາໄດ້ບອກສິ່ງເຫລົ່ານີ້ແກ່ທ່ານທັງຫລາຍ ເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານ ແລະຄວາມຍິນ-
ດີຂອງທ່ານຈະຄົບບໍຣິບູນ.
[12]ນີ້ຄືຄຳບັນຊາຂອງເຮົາ, ໃຫ້ທ່ານຮັກຊຶ່ງກັນແລະກັນ ເໝືອນຢ່າງທີ່ເຮົາໄດ້ຮັກທ່ານ.[13]ບໍ່ມີຜູ້ໃດມີຄວາມຮັກທີ່ຍິ່ງໃຫຍ່ກວ່ານີ້, ທີ່ເຂົາຈະໄດ້ສະ-
ຫລະຊີວິດຂອງເຂົາແກ່ສະຫາຍຂອງຕົນ.
[14]ທ່ານເປັນສະຫາຍຂອງເຮົາ ຖ້າທ່ານເຮັດຕາມສິ່ງທີ່ເຮົາໄດ້ບັນຊາໄວ້ແກ່ທ່ານ.[15]ເຮົາບໍ່ເອີ້ນທ່ານວ່າຂ້ອຍໃຊ້ອີກຕໍ່ໄປ,
ເພາະຂ້ອຍໃຊ້ບໍ່ຮູ້ວ່າເຈົ້ານາຍຂອງຕົນກຳລັງເຮັດອັນໃດຢູ່. ເຮົາໄດ້ເອີ້ນທ່ານວ່າເປັນສະຫາຍຂອງເຮົາ, ເພາະທຸກສິ່ງທີ່ເຮົາໄດ້ຍິນຈາກພຣະບິ-
ດາຂອງເຮົາ, ເຮົາກໍໄດ້ສຳແດງແກ່ທ່ານດ້ວຍ.
[16]ທ່ານບໍ່ໄດ້ເລືອກເອົາເຮົາ, ແຕ່ເຮົາໄດ້ເລືອກເອົາທ່ານແລະໄດ້ແຕ່ງຕັ້ງທ່ານໄວ້ ເພື່ອທີ່ທ່ານຈະອອກໄປແລະເກີດຜົນ,
ແລະເພື່ອທີ່ຜົນຂອງທ່ານຈະຕັ້ງຢູ່. ເພື່ອວ່າເມື່ອທ່ານທູນຂໍສິ່ງໃດຈາກພຣະບິດາໃນນາມຂອງເຮົາ, ພຣະອົງຈະມອບສິ່ງນັ້ນໃຫ້ແກ່ທ່ານ.
[17]ສິ່ງເຫລົ່ານີ້ທີ່ເຮົາໄດ້ບັນຊາແກ່ທ່ານນັ້ນ, ຄືໃຫ້ທ່ານຮັກຊຶ່ງກັນແລະກັນ.
[18]ຖ້າໂລກກຽດຊັງທ່ານ, ຈົ່ງຮູ້ເຖີ້ນວ່າໂລກໄດ້ກຽດຊັງເຮົາກ່ອນທີ່ຈະກຽດຊັງທ່ານ.[19]ຖ້າທ່ານເປັນຂອງໂລກ,
ໂລກກໍຈະຮັກທ່ານເໝືອນທ່ານເປັນຂອງໂລກ. ແຕ່ເພາະວ່າທ່ານບໍ່ໄດ້ເປັນຂອງໂລກແລະເພາະເຮົາໄດ້ເລືອກເອົາທ່ານອອກມາຈາກໂລກ,
ດັ່ງນັ້ນໂລກຈຶ່ງກຽດຊັງທ່ານ.
[20]ຈົ່ງຣະນຶກເຖິງຄຳທີ່ເຮົາໄດ້ກ່າວກັບທ່ານວ່າ, 'ຂ້ອຍໃຊ້ບໍ່ເປັນໃຫຍ່ກວ່ານາຍຂອງຕົນ' ຖ້າເຂົາຂົ່ມເຫັງເຮົາ, ເຂົາກໍຈະຂົ່ມເຫັງທ່ານດ້ວຍ;
ຖ້າເຂົາເຮັດຕາມຂໍ້ຄວາມຂອງເຮົາ, ເຂົາກໍຈະເຮັດຕາມຂໍ້ຄວາມຂອງທ່ານດ້ວຍ.
[21]ເຂົາຈະເຮັດສິ່ງເຫລົ່ານັ້ນແກ່ທ່ານ ເພາະນາມຂອງເຮົາ, ເພາະວ່າພວກເຂົາບໍ່ຮູ້ຈັກພຣະອົງຜູ້ສົ່ງເຮົາມາ.
[22]ຖ້າເຮົາບໍ່ໄດ້ມາເພື່ອທີ່ຈະກ່າວສິ່ງເຫລົ່ານີ້ແກ່ພວກເຂົາ, ພວກເຂົາກໍຄົງບໍ່ມີບາບ,
ແຕ່ຕອນນີ້ພວກເຂົາບໍ່ມີຂໍ້ແກ້ຕົວອັນໃດໃນເລື່ອງຄວາມບາບຂອງພວກເຂົາ.
[23]ຜູ້ໃດທີ່ກຽດຊັງເຮົາກໍຈະກຽດຊັງພຣະບິດາຂອງເຮົາດ້ວຍ.[24]ຖ້າເຮົາບໍ່ໄດ້ເຮັດກິຈະການທີ່ບໍ່ມີຜູ້ໃດໄດ້ເຮັດຖ້າມກາງພວກເຂົາ,
ພວກເຂົາກໍຄົງບໍ່ມີບາບ, ແຕ່ຕອນນີ້ພວກເຂົາໄດ້ເຫັນແລະຍັງໄດ້ກຽດຊັງແລະພຣະບິດາດ້ວຍ.[25]ແຕ່ເພື່ອພຣະທັມທີ່ໄດ້ບອກເອົາໄວ້ໃນພຣະບັນ-
ຍັດຂອງພວກເຂົາວ່າ ‘ພວກເຂົາກຽດຊັງເຮົາໂດຍບໍ່ມີສາເຫດ’ ຈະເປັນຈິງ.
[26]ເມື່ອອົງພຣະຜູ້ຊ່ອຍ ຄືຜູ້ທີ່ເຮົາຈະສົ່ງມາຍັງທ່ານ ຊຶ່ງມາຈາກພຣະບິດາ, ນັ້ນຄື, ພຣະວິນຍານແຫ່ງຄວາມຈິງ, ຜູ້ທີ່ອອກຈາກພຣະບິດານັ້ນ,
ພຣະອົງຈະເປັນພະຍານກ່ຽວກັບເຮົາ.[27]ທ່ານເອງກໍເປັນພະຍານເໝືອນກັນ ເພາະວ່າທ່ານໄດ້ຢູ່ກັບເຮົາຕັ້ງແຕ່ເລີ່ມຕົ້ນ.


generated on Tue Jun 17 19:01:42 2025

# 16

[1]"ເຮົາໄດ້ບອກສິ່ງເຫລົ່ານີ້ກັບທ່ານເພື່ອທີ່ທ່ານຈະບໍ່ສະດຸດລົ້ມ.[2]ພວກເຂົາຈະໄລ່ທ່ານອອກຈາກໂຮງທັມະເທສະໜາ ແຕ່ເວ-
ລານັ້ນຈະມາເຖິງເມື່ອບຸກຄົນທີ່ຂ້າທ່ານຈະຄິດວ່າ ຕົນກຳລັງເຮັດການນີ້ເພື່ອບູຊາຕໍ່ພຣະເຈົ້າ.

[3]ພວກເຂົາຈະເຮັດສິ່ງເຫລົ່ານີ້ ເພາະວ່າພວກເຂົາບໍ່ຮູ້ຈັກພຣະບິດາ ແລະບໍ່ຮູ້ຈັກເຮົາດ້ວຍ.[4]ເຮົາໄດ້ບອກສິ່ງເຫລົ່ານີ້ກັບທ່ານ ເມື່ອເວ-
ລານັ້ນມາເຖິງ, ທ່ານຈະຣະນຶກວ່າເຮົາໄດ້ບອກກັບທ່ານກ່ຽວກັບພວກເຂົາ. ເຮົາບໍ່ໄດ້ບອກສິ່ງເຫລົ່ານີ້ແກ່ທ່ານຕັ້ງແຕ່ທຳອິດ, ເພາະ-
ວ່າເຮົາຍັງຢູ່ກັບທ່ານ.
[5]ແຕ່ຕອນນີ້ເຮົາຈະໄປຫາຜູ້ຊຶ່ງໃຊ້ເຮົາມາ, ແຕ່ບໍ່ມີຜູ້ໃດໃນພວກທ່ານຖາມເຮົາວ່າ, ‘ພຣະອົງກຳລັງສະເດັດໄປທີ່ໃດ’.
[6]ແຕ່ເພາະເຮົາໄດ້ບອກສິ່ງເຫລົ່ານີ້ກັບທ່ານ, ຈິດໃຈຂອງທ່ານຈຶ່ງເຕັມໄປດ້ວຍຄວາມໂສກເສົ້າ.[7]ແຕ່ເຮົາບອກຄວາມຈິງແກ່ທ່ານວ່າ,
ເປັນການດີກວ່າທີ່ເຮົາຈະຈາກທ່ານໄປ. ເພາະຖ້າເຮົາບໍ່ຈາກທ່ານໄປ, ອົງຜູ້ຊ່ອຍນັ້ນຈະບໍ່ໄດ້ມາຫາທ່ານ, ແຕ່ຖ້າເຮົາຈາກໄປ, ເຮົາກໍຈະສົ່ງພຣະ-
ອົງມາຫາທ່ານ.
[8]ເມື່ອພຣະອົງສະເດັດມາ, ອົງຜູ້ຊ່ອຍຈະພິສູດໃຫ້ໂລກຮູ້ແຈ້ງຄວາມຜິດບາບ, ຄວາມຊອບທັມ, ແລະການພິພາກສາ.[9]ໃນເລື່ອງບາບນັ້ນ,
ເພາະພວກເຂົາບໍ່ໄດ້ເຊື່ອໃນເຮົາ.[10]ໃນເລື່ອງຄວາມຊອບທັມນັ້ນ, ເພາະເຮົາກຳລັງຈະໄປຫາພຣະບິດາ, ແລະທ່ານຈະບໍ່ເຫັນເຮົາອີກ.
[11]ແລະໃນເລື່ອງການພິພາກສານັ້ນ, ເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ.
[12]ເຮົາຍັງມີອີກຫລາຍສິ່ງທີ່ຈະບອກກັບພວກທ່ານ, ແຕ່ພວກທ່ານຈະຍັງບໍ່ເຂົ້າໃຈສິ່ງເຫລົ່ານັ້ນໃນຕອນນີ້.[13]ແຕ່ເມື່ອຜູ້ນັ້ນ, ຄືພຣະວິນ-
ຍານແຫ່ງຄວາມຈິງສະເດັດມາ, ພຣະອົງຈະນຳທ່ານໄປສູ່ຄວາມຈິງ, ເພາະພຣະອົງຈະບໍ່ກ່າວຕາມໃຈຂອງພຣະອົງເອງ. ແຕ່ພຣະ-
ອົງຈະກ່າວໃນສິ່ງທີ່ພຣະອົງໄດ້ຍິນ, ແລະພຣະອົງຈະເວົ້າກັບທ່ານສິ່ງໃດຈະມາເຖິງ.[14]ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ, ເພາະວ່າພຣະ-
ອົງຈະຊົງເອົາສິ່ງທີ່ເປັນຂອງເຮົາແລະພຣະອົງຈະບອກສິ່ງເຫລົ່ານັ້ນແກ່ທ່ານ.
[15]ທຸກສິ່ງທີ່ພຣະບິດາຊົງມີນັ້ນເປັນຂອງເຮົາ. ເຫດສັນນັ້ນ, ເຮົາຈຶ່ງບອກວ່າພຣະວິນ-
ຍານຊົງເອົາສິ່ງຊຶ່ງເປັນຂອງເຮົາແລະພຣະອົງຈະບອກສິ່ງເຫລົ່ານັ້ນແກ່ທ່ານ.[16]ໃນອີກບໍ່ດົນທ່ານຈະບໍ່ເຫັນເຮົາ,
ແລະພາຍຫລັງອີກບໍ່ດົນທ່ານກໍຈະເຫັນເຮົາ.”
[17]ແລ້ວບາງຄົນໃນພວກສາວົກຂອງພຣະອົງກໍເວົ້າຕໍ່ກັນວ່າ, “ພຣະອົງນັ້ນກຳລັງກ່າວສິ່ງໃດແກ່ເຮົາທີ່ວ່າ, ‘ໃນອີກບໍ່ດົນທ່ານຈະບໍ່ເຫັນເຮົາ
ແລະພາຍຫລັງອີກບໍ່ດົນທ່ານກໍຈະເຫັນເຮົາ,' ແລະ ‘ເພາະວ່າເຮົາຈະໄປຫາພຣະບິດາ’?"[18]ດັ່ງນັ້ນພວກເຂົາຈຶ່ງເວົ້າວ່າ, “ທີ່ພຣະອົງກ່າວວ່າ
'ອີກບໍ່ດົນ' ນັ້ນໝາຍຄວາມວ່າຢ່າງໃດ? ພວກເຮົາບໍ່ເຂົ້າໃຈວ່າພຣະອົງກຳລັງເວົ້າເຖິງສິ່ງໃດ?”
[19]ພຣະເຢຊູຊົງຊາບວ່າພວກເຂົາຕ້ອງການທີ່ຈະຖາມພຣະອົງ, ພຣະອົງຈຶ່ງຊົງກ່າວແກ່ພວກເຂົາວ່າ,
“ນີ້ຄືສິ່ງທີ່ທ່ານກຳລັງຖາມກັນໃນໝູ່ພວກທ່ານເອງຫລືທີ່ວ່າ, ‘ອີກບໍ່ດົນ ທ່ານຈະບໍ່ເຫັນເຮົາ,
ແລະພາຍຫລັງອີກບໍ່ດົນທ່ານກໍຈະເຫັນເຮົາ?'[20]ເຮົາບອກຄວາມຈິງແກ່ພວກທ່ານວ່າ, ທ່ານຈະຮ້ອງໄຫ້ແລະຮ່ຳໄຮ, ແຕ່ໂລກນັ້ນຈະຍິນດີ.
ທ່ານຈະເຕັມໄປດ້ວຍຄວາມທຸກໂສກເສົ້າ, ແຕ່ຄວາມເສັ້ຽໃຈຂອງທ່ານຈະປ່ຽນເປັນຄວາມຊື່ນຊົມຍິນດີ.[21]ເມື່ອຜູ້ຍິງນັ້ນໃຫ້ເກີດລູກ
ນາງກໍມີຄວາມທຸກໂສກເພາະວ່າກຳນົດຂອງນາງມາເຖິງແລ້ວ, ແຕ່ເມື່ອນາງໄດ້ເກີດລູກຂອງນາງອອກມາແລ້ວ ນາງກໍຈະບໍ່ຣະນຶກເຖິງຄວາມ-
ເຈັບປວດຂອງນາງອີກ ເພາະມີຄວາມຊົມຊື່ນຍິນດີທີ່ລູກຂອງນາງໄດ້ເກີດມາໃນໂລກນີ້.
[22]ໃນຂະນະທີ່ທ່ານເສົ້າໂສກ, ແຕ່ເຮົາຈະມາຫາທ່ານອີກ, ແລະຈິດໃຈຂອງທ່ານຈະຍິນດີ,
ແລະຈະບໍ່ມີຜູ້ໃດເອົາຄວາມຊື່ນຊົມຍິນດີນັ້ນໄປຈາກທ່ານໄດ້.[23]ໃນວັນນັ້ນທ່ານຈະບໍ່ຖາມເຮົາເຖິງສິ່ງໃດອີກ. ເຮົາບອກຄວາມຈິງແກ່ທ່ານວ່າ,
ຖ້າທ່ານທູນຂໍສິ່ງໃດຈາກພຣະບິດາໃນນາມຂອງເຮົາ, ພຣະອົງຈະໃຫ້ແກ່ທ່ານ.[24]ເຖິງບັດນີ້ຖ້າທ່ານຍັງບໍ່ໄດ້ຂໍສິ່ງໃດນຳນາມຂອງເຮົາ. ຈົ່ງຂໍເຖີດ,
ແລ້ວທ່ານຈະໄດ້ຮັບເພື່ອທີ່ຄວາມຍິນດີຂອງທ່ານຈະເຕັມບໍຣິບູນ.
[25]ເຮົາໄດ້ກ່າວສິ່ງເຫລົ່ານີ້ກັບທ່ານເປັນຄຳອຸປະມາ, ເມື່ອເວລານັ້ນມາເຖິງຄືເມື່ອເຮົາຈະບໍ່ກ່າວກັບທ່ານເປັນຄຳອຸປະມາອີກ,
ແຕ່ເຮົາຈະບອກກັບທ່ານເຖິງເລື່ອງຂອງພຣະບິດາຢ່າງແຈ່ມແຈ້ງ.
[26]ໃນວັນນັ້ນທ່ານຈະຂໍໃນນາມຂອງເຮົາ ແລະເຮົາຈະບໍ່ບອກກັບທ່ານວ່າເຮົາຈະອ້ອນວອນຂໍພຣະບິດາເພື່ອທ່ານ,[27]ເພາະພຣະບິ-
ດາເອງຊົງຮັກພວກທ່ານ ເພາະວ່າພວກທ່ານໄດ້ຮັກເຮົາແລະເພາະວ່າທ່ານໄດ້ເຊື່ອວ່າເຮົາມາຈາກພຣະບິດາ.[28]ເຮົາມາຈາກພຣະບິດາ,
ແລະໄດ້ເຂົ້າມາໃນໂລກນີ້. ອີກຄັ້ງໜຶ່ງ, ເຮົາກຳລັງຈະຈາກໂລກນີ້ໄປແລະເຮົາຈະໄປຫາພຣະບິດາຂອງເຮົາ.”
[29]ພວກສາວົກຂອງພຣະອົງທູນວ່າ, “ນີ້ແຫລະ, ຕອນນີ້ພຣະອົງກຳລັງກ່າວຢ່າງແຈ່ມແຈ້ງແລະພຣະອົງບໍ່ໄດ້ກ່າວແກ່ພວກເຮົາເປັນຄຳອຸປະມາ.
[30]ຕອນນີ້ ພວກຂ້ານ້ອຍຮູ້ແລ້ວວ່າພຣະອົງຊົງຮູ້ທຸກສິ່ງ, ແລະພຣະອົງບໍ່ຕ້ອງການໃຫ້ໃຜຖາມພຣະອົງອີກ. ດ້ວຍເຫດນີ້, ພວກຂ້າ-
ນ້ອຍຈຶ່ງເຊື່ອແລ້ວວ່າພຣະອົງຊົງມາຈາກພຣະເຈົ້າ.”[31]ພຣະເຢຊູຊົງຕອບພວກເຂົາວ່າ, “ຕອນນີ້ທ່ານເຊື່ອເຮົາແລ້ວຫລື?
[32]ເບິ່ງແມ, ເວລານັ້ນກຳລັງຈະມາ, ແລະເວລານັ້ນກໍໄດ້ມາເຖິງແລ້ວ, ເມື່ອພວກທ່ານຈະຖືກເຮັດໃຫ້ແຕກຊະກັນໄປ,
ທຸກຄົນຈະແຍກກັບໄປບ້ານຂອງຕົນແລະທ່ານຈະປະເຮົາໄວ້. ແຕ່ວ່າເຮົາບໍ່ໄດ້ໂດດດຽວ ດ້ວຍວ່າພຣະບິດາຊົງສະຖິດກັບເຮົາ.
[33]ເຮົາໄດ້ບອກສິ່ງເຫລົ່ານີ້ແກ່ທ່ານເພື່ອທີ່ທ່ານຈະໄດ້ມີສັນຕິສຸກໃນເຮົາ. ທ່ານຈະພົບກັບຄວາມທຸກລຳບາກໃນໂລກນີ້, ແຕ່ຈົ່ງກ້າຫານເຖີດ:
ເພາະວ່າເຮົາໄດ້ຊະນະໂລກແລ້ວ.”


generated on Tue Jun 17 19:01:42 2025

17 [1]ພຣະອົງກໍຊົງເງີຍພຣະພັກຂຶ້ນເບິ່ງຟ້າແລະກ່າວວ່າ, “ຂ້າແດ່ພຣະບິດາ, ບັດນີ້ເຖິງເວລາແລ້ວ ຂໍຊົງໂຜດໃຫ້ພຣະບຸດຂອງພຣະ-
ອົງໄດ້ຮັບກຽດຕິຍົດ ເພື່ອພຣະບຸດຈະໄດ້ຖວາຍກຽດຕິຍົດແດ່ພຣະອົງ.[2]ດັ່ງທີ່ພຣະອົງໄດ້ໂຜດໃຫ້ພຣະບຸດມີສິດອຳນາດເໜືອມະ-
ນຸດທັງປວງ ເພື່ອໃຫ້ພຣະບຸດປຣະທານຊີວິດອັນຕະຫລອດໄປເປັນນິດ ແກ່ຄົນທີ່ພຣະອົງໄດ້ຊົງມອບແກ່ພຣະບຸດນັ້ນ.

[3]ແລະນີ້ແຫລະແມ່ນຊີວິດອັນຕະຫລອດໄປເປັນນິດ: ຄືການທີ່ພວກເຂົາຮູ້ຈັກພຣະອົງຜູ້ຊົງເປັນພຣະເຈົ້າທ່ຽງແທ້ອົງດຽວ, ແລະຮູ້ຈັກພຣະເຢຊູ-
ຄຣິດ, ທີ່ພຣະອົງຊົງໃຊ້ມາ.[4]ຂ້ານ້ອຍຖວາຍກຽດຕິຍົດແດ່ພຣະອົງໃນໂລກ ເພາະຂ້ານ້ອຍເຮັດກິຈະການທີ່ພຣະອົງຊົງໃຊ້ຂ້ານ້ອຍເຮັດນັ້ນສຳ-
ເລັດແລ້ວ.[5]ບັດນີ້, ຂ້າແດ່ພຣະບິດາ, ຂໍໂຜດໃຫ້ຂ້ານ້ອຍໄດ້ຮັບກຽດຕິຍົດຕໍ່ພຣະພັກຂອງພຣະອົງ ຄືກຽດຕິຍົດທີ່ຂ້ານ້ອຍມີຮ່ວມກັບພຣະ-
ອົງກ່ອນທີ່ໂລກນີ້ມີມາ.
[6]ຂ້ານ້ອຍສຳແດງພຣະນາມຂອງພຣະອົງ ແກ່ບັນດາຄົນທີ່ພຣະອົງຊົງປຣະທານແກ່ຂ້ານ້ອຍຈາກໂລກ. ຄົນເຫລົ່ານັ້ນເປັນຂອງພຣະອົງແລ້ວ,
ແລະພຣະອົງປຣະທານພວກເຂົາແກ່ຂ້ານ້ອຍ, ແລະເຂົາໄດ້ປະຕິບັດຕາມພຣະທັມຂອງພຣະອົງແລ້ວ.[7]ບັດນີ້ພວກເຂົາຮູ້ວ່າທຸກສິ່ງທີ່ພຣະ-
ອົງປຣະທານແກ່ຂ້ານ້ອຍນັ້ນມາຈາກພຣະອົງ,[8]ເພາະວ່າຖ້ອຍຄຳທີ່ພຣະອົງກ່າວແກ່ຂ້ານ້ອຍນັ້ນ. ຂ້າ-
ນ້ອຍໃຫ້ພວກເຂົາແລ້ວແລະພວກເຂົາຮັບໄວ້ ແລະຮູ້ແນ່ວ່າຂ້ານ້ອຍມາຈາກພຣະອົງ, ແລະເຊື່ອວ່າພຣະອົງຊົງໃຊ້ຂ້ານ້ອຍມາ.
[9]ຂ້ານ້ອຍອ້ອນວອນເພື່ອພວກເຂົາ. ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອໂລກ, ແຕ່ເພື່ອຄົນເຫລົ່ານັ້ນທີ່ພຣະອົງປຣະທານແກ່ຂ້ານ້ອຍ, ເພາະ-
ວ່າເຂົາເປັນຂອງພຣະອົງ.[10]ທຸກສິ່ງທີ່ເປັນຂອງຂ້ານ້ອຍກໍເປັນຂອງພຣະອົງ ແລະທຸກສິ່ງທີ່ເປັນຂອງພຣະອົງກໍເປັນຂອງຂ້ານ້ອຍ ແລະຂ້າ-
ນ້ອຍໄດ້ຮັບກຽດຕິຍົດໃນສິ່ງເຫລົ່ານັ້ນ.[11]ຂ້ານ້ອຍຈະບໍ່ຢູ່ໃນໂລກນີ້ອີກ ແຕ່ພວກເຂົາຍັງຢູ່ໃນໂລກນີ້ ແລະຂ້ານ້ອຍກຳລັງຈະໄປຫາພຣະອົງ
ແດ່ພຣະບິດາຜູ້ບໍຣິສຸດ, ຂໍພຣະອົງຊົງພິທັກຮັກ-
ສາເຂົາໄວ້ໂດຍຣິດອຳນາດແຫ່ງພຣະນາມຂອງພຣະອົງຄືພຣະນາມທີ່ພຣະອົງໄດ້ປຣະທານໃຫ້ແກ່ຂ້ານ້ອຍນັ້ນ
ເພື່ອເຂົາຈະເປັນອັນໜຶ່ງອັນດຽວກັນ ເໝືອນດັ່ງຂ້ານ້ອຍກັບພຣະອົງ.
[12]ເມື່ອຂ້ານ້ອຍຍັງຢູ່ກັບພວກເຂົາ, ຂ້ານ້ອຍກໍພິທັກຮັກສາເຂົາ, ຜູ້ທີ່ພຣະອົງປຣະທານແກ່ຂ້ານ້ອຍໄວ້ໂດຍພຣະນາມຂອງພຣະອົງ. ຂ້າ-
ນ້ອຍປົກປັກພວກເຂົາໄວ້, ແລະບໍ່ມີຜູ້ໃດໃນພວກເຂົາຈິບຫາຍ, ນອກຈາກລູກທີ່ໝາຍໄວ້ສຳລັບຄວາມຈິບຫາຍ, ເພື່ອໃຫ້ເປັນຈິງຕາມຂໍ້ພຣະ-
ຄັມພີ.[13]ແຕ່ບັດນີ້ຂ້ານ້ອຍກຳລັງຈະໄປຫາພຣະອົງ, ຂ້ານ້ອຍກ່າວເຖິງສິ່ງນີ້ໃນໂລກ ເພື່ອໃຫ້ເຂົາໄດ້ຮັບຄວາມຊົມຊື່ນຍິນດີ ໃນຂ້າ-
ນ້ອຍຢ່າງເຕັມລົ້ນ.[14]ຂ້ານ້ອຍມອບພຣະທັມຂອງພຣະອົງໃຫ້ແກ່ພວກເຂົາແລ້ວ, ແລະໂລກນີ້ກຽດຊັງເຂົາ ເພາະເຂົາບໍ່ແມ່ນຝ່າຍໂລກ,
ເໝືອນຢ່າງທີ່ຂ້ານ້ອຍບໍ່ແມ່ນຝ່າຍໂລກ.
[15]ຂ້ານ້ອຍບໍ່ໄດ້ຂໍໃຫ້ພຣະອົງເອົາພວກເຂົາອອກໄປຈາກໂລກ, ແຕ່ຂໍໃຫ້ປົກປ້ອງເຂົາໄວ້ໃຫ້ພົ້ນຈາກມານຮ້າຍ.[16]ເຂົາບໍ່ແມ່ນຝ່າຍໂລກ,
ເໝືອນດັ່ງຂ້ານ້ອຍບໍ່ແມ່ນຝ່າຍໂລກ.[17]ຂໍຊົງແຍກພວກເຂົາໃຫ້ບໍຣິສຸດດ້ວຍຄວາມຈິງ. ພຣະທັມຂອງພຣະອົງເປັນຄວາມຈິງ.
[18]ພຣະອົງຊົງໃຊ້ຂ້ານ້ອຍມາໃນໂລກສັນໃດ, ຂ້ານ້ອຍກໍໃຊ້ພວກເຂົາໄປໃນໂລກສັນນັ້ນ.[19]ຂ້ານ້ອຍແຍກຕົວໃຫ້ບໍຣິສຸດເພາະເຫັນ-
ແກ່ເຂົາທັງຫລາຍ, ເພື່ອໃຫ້ເຂົາຮັບການແຍກໃຫ້ບໍຣິສຸດດ້ວຍຄວາມຈິງ.
[20]ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອຄົນເຫລົ່ານີ້ພວກດຽວ, ແຕ່ເພື່ອທຸກຄົນທີ່ວາງໃຈໃນຂ້ານ້ອຍ
ເພາະຖ້ອຍຄຳຂອງພວກເຂົາ[21]ເພື່ອພວກເຂົາຈະໄດ້ເປັນອັນໜຶ່ງອັນດຽວກັນ, ດັ່ງທີ່ພຣະອົງຜູ້ເປັນພຣະບິດາ, ສະຖິດໃນຂ້ານ້ອຍ, ແລະຂ້າ-
ນ້ອຍໃນພຣະອົງ. ຂ້ານ້ອຍອ້ອນວອນເພື່ອພວກເຂົາຈະໄດ້ຢູ່ໃນເຮົາພຣະອົງແລະໃນຂ້ານ້ອຍດ້ວຍ ເພື່ອໂລກຈະໄດ້ເຊື່ອວ່າພຣະອົງຊົງໃຊ້ຂ້າ-
ນ້ອຍມາ.
[22]ກຽດຕິຍົດຊຶ່ງພຣະອົງປຣະທານແກ່ຂ້ານ້ອຍນັ້ນ, ຂ້ານ້ອຍມອບໃຫ້ແກ່ພວກເຂົາ, ເພື່ອພວກເຂົາຈະໄດ້ເປັນອັນໜຶ່ງອັນດຽວກັນ,
ເໝືອນດັ່ງພຣະອົງກັບຂ້ານ້ອຍ:[23]ຂ້ານ້ອຍຢູ່ໃນພວກເຂົາ, ແລະພຣະອົງຊົງຢູ່ໃນຂ້ານ້ອຍ ເພື່ອພວກເຂົາຈະໄດ້ເປັນອັນໜຶ່ງອັນດຽວກັນຢ່າງສົມ-
ບູນ, ເພື່ອໂລກຈະໄດ້ຮູ້ວ່າແມ່ນພຣະອົງຊົງໃຊ້ຂ້ານ້ອຍມາ, ແລະພຣະອົງຊົງຮັກເຂົາເໝືອນດັ່ງທີ່ພຣະອົງຊົງຮັກຂ້ານ້ອຍ.
[24]ຂ້າແດ່ພຣະບິດາ, ຂ້ານ້ອຍປາຖນາຢາກໃຫ້ຄົນເຫລົ່ານັ້ນ ທີ່ພຣະອົງປຣະທານໃຫ້ແກ່ຂ້ານ້ອຍນັ້ນ, ຢູ່ກັບຂ້ານ້ອຍໃນບ່ອນທີ່ຂ້ານ້ອຍຢູ່ນັ້ນ,
ເພື່ອພວກເຂົາຈະໄດ້ເຫັນສະຫງ່າຣາສີຂອງຂ້ານ້ອຍ ຊຶ່ງພຣະອົງຊົງປຣະທານໃຫ້ແກ່ຂ້ານ້ອຍ ເພາະພຣະອົງຊົງຮັກຂ້າ-
ນ້ອຍກ່ອນທີ່ພຣະອົງຊົງສ້າງໂລກ.
[25]ຂ້າແດ່ພຣະບິດາຜູ້ຊົງຍຸຕິທັມ, ໂລກນີ້ບໍ່ຮູ້ຈັກພຣະອົງ, ແຕ່ຂ້ານ້ອຍຮູ້ຈັກພຣະອົງ; ແລະຄົນເຫລົ່ານີ້ຮູ້ວ່າແມ່ນພຣະອົງຊົງໃຊ້ຂ້ານ້ອຍມາ.[26]ຂ້າ-
ນ້ອຍເຮັດໃຫ້ເຂົາຮູ້ຈັກພຣະນາມຂອງພຣະອົງ, ແລະຈະເຮັດໃຫ້ເຂົາຮູ້ອີກ ເພື່ອຄວາມຮັກທີ່ພຣະອົງໄດ້ຊົງຮັກຂ້ານ້ອຍຈະຢູ່ໃນເຂົາ, ແລະຂ້າ-
ນ້ອຍກໍຢູ່ໃນເຂົາ.”


generated on Tue Jun 17 19:01:42 2025

18 1ເມື່ອພຣະເຢຊູກ່າວຢ່າງນີ້ແລ້ວ, ພຣະອົງສະເດັດອອກໄປກັບພວກສາວົກຂອງພຣະອົງຂ້າມຫ້ວຍກິດໂຣນ, ໄປເຖິງສວນແຫ່ງໜຶ່ງ ພຣະ-
ອົງສະເດັດເຂົ້າໄປໃນສວນນັ້ນກັບພວກສາວົກ.2ຢູດາ, ຜູ້ທີ່ຈະທໍຣະຍົດພຣະອົງກໍຮູ້ຈັກບ່ອນນັ້ນເໝືອນກັນ, ເພາະວ່າພຣະເຢຊູກັບພວກສາ-
ວົກເຄີຍມາພົບກັນທີ່ນັ້ນ ຫລາຍເທື່ອແລ້ວ.3ຢູດາພາພວກທະຫານທີ່ມາຈາກພວກຫົວໜ້າປະໂລຫິດ ແລະພວກຟາຣິຊາຍແລະພວກເຈົ້າໜ້າທີ່
ພວກເຂົາຖືໂຄມ, ຖືກະບອງ, ແລະອາວຸດໄປທີ່ນັ້ນ.

4ພຣະເຢຊູຊຶ່ງຊາບທຸກສິ່ງທີ່ຈະເກີດຂຶ້ນກັບພຣະອົງ, ພຣະອົງຈຶ່ງສະເດັດອອກໄປຖາມເຂົາວ່າ, “ພວກທ່ານມາຫາໃຜ?”5ເຂົາທູນຕອບພຣະ-
ອົງວ່າ, “ມາຫາເຢຊູໄທນາຊາເຣັດ” ພຣະເຢຊູກ່າວກັບພວກເຂົາວ່າ, “ເຮົາເປັນຜູ້ນັ້ນ” ຢູດາ, ຄົນທີ່ທໍຣະຍົດພຣະອົງ,
ກໍຢືນຢູ່ກັບພວກທະຫານເຫລົ່ານັ້ນ.
6ເມື່ອພຣະອົງກ່າວກັບພວກເຂົາວ່າ, “ເຮົາເປັນຜູ້ນັ້ນ” ເຂົາກໍຖອຍຫລັງແລະລົ້ມລົງເທິງດິນ.7ພຣະອົງຖາມເຂົາອີກວ່າ, “ພວກທ່ານມາຫາໃຜ?”
ເຂົາທູນຕອບວ່າ, “ມາຫາເຢຊູໄທນາຊາເຣັດ.”
8ພຣະເຢຊູຕອບວ່າ, “ເຮົາບອກທ່ານແລ້ວວ່າເຮົາເປັນຜູ້ນັ້ນ. ຖ້າທ່ານຊອກຫາເຮົາ,
ກໍຈົ່ງປະຄົນເຫລົ່ານີ້ໄປເສັຽ.”9ທັງນີ້ເພື່ອໃຫ້ເປັນຈິງຕາມພຣະທັມອົງຊຶ່ງກ່າວວ່າ, “ຄົນເຫລົ່ານັ້ນທີ່ພຣະອົງປຣະທານແກ່ຂ້ານ້ອຍ
ບໍ່ໄດ້ສູນເສັຽໄປແມ່ນແຕ່ຄົນດຽວ.”
10ຊີໂມນເປໂຕມີດາບຈຶ່ງຖອດອອກມາຟັນຂ້ອຍໃຊ້ຄົນໜຶ່ງຂອງມະຫາປະໂລຫິດ ຖືກຫູເບື້ອງຂວາຂາດ ຂ້າໃຊ້ຄົນນັ້ນຊື່ວ່າ ມາລະໂຂ.11ພຣະ-
ເຢຊູກ່າວກັບເປໂຕວ່າ, “ຈົ່ງເອົາດາບໃສ່ຝັກເສັຽ. ເຮົາຈະບໍ່ດື່ມຈອກທີ່ພຣະບິດາປຣະທານແກ່ເຮົາຫລື?”
12ພວກທະຫານກັບນາຍທະຫານ, ແລະເຈົ້າໜ້າທີ່ຂອງພວກຢິວ, ຈຶ່ງຈັບພຣະເຢຊູມັດໄວ້.13ແລ້ວພາພຣະອົງໄປຫາອັນນາກ່ອນ, ເພາະອັນ-
ນາເປັນພໍ່ເຖົ້າຂອງກາຢະຟາ, ຊຶ່ງເປັນມະຫາປະໂລຫິດໃນປີນັ້ນ.14ກາຢະຟາຄົນນີ້ແຫລະທີ່ແນະນຳພວກຢິວວ່າ
ຄວນໃຫ້ຄົນໜຶ່ງຕາຍແທນປະຊາຊົນທັງໝົດ.
15ຊີໂມນເປໂຕກັບສາວົກອີກຄົນໜຶ່ງຕິດຕາມພຣະເຢຊູໄປ, ແຕ່ເພາະສາວົກຄົນນັ້ນຮູ້ຈັກກັນກັບມະຫາປະໂລຫິດ, ແລະເຂົາຈຶ່ງເຂົ້າໄປກັບພຣະ-
ເຢຊູຈົນເຖິງເດີ່ນບ້ານຂອງມະຫາປະໂລຫິດ;16ແຕ່ເປໂຕຢືນຢູ່ນອກຮິມປະຕູ. ສາວົກອີກຄົນໜຶ່ງນັ້ນ, ຮູ້ຈັກກັບມະຫາປະໂລ-
ຫິດຈຶ່ງອອກໄປເວົ້າກັບຜູ້ຍິງທີ່ເຝົ້າປະຕູ ແລ້ວກໍພາເປໂຕເຂົ້າໄປ.
17ຍິງໃຊ້ຄົນທີ່ເຝົ້າປະຕູຖາມເປໂຕວ່າ, “ທ່ານກໍເປັນຄົນຫນຶ່ງໃນພວກສາວົກຂອງຄົນນັ້ນເໝືອນກັນແມ່ນຫລືບໍ່?” ເປໂຕຕອບວ່າ,
“ບໍ່ແມ່ນ.”18ພວກຂ້ອຍໃຊ້ກັບເຈົ້າຫນ້າທີ່ກໍຢືນຢູ່ທີ່ນັ້ນ, ເອົາຖ່ານມາດັງໄຟເພາະອາກາດຫນາວ, ຈຶ່ງພາກັນຢືນຜີງໄຟຢູ່. ເປ-
ໂຕກໍຢືນຜີງໄຟນຳເຂົາເໝືອນກັນ.
19ມະຫາປະໂລຫິດກໍຖາມພຣະເຢຊູເຖິງພວກສາວົກຂອງພຣະອົງແລະຄຳສອນຂອງພຣະອົງ.20ພຣະເຢຊູຕອບທ່ານວ່າ,
“ເຮົາກ່າວໃຫ້ໂລກຟັງຢ່າງເປີດເຜີຍ ເຮົາສັ່ງສອນສະເຫມີໃນໂຮງທັມະເທດສະຫນາ ແລະໃນບໍຣິເວນພຣະວິຫານທີ່ພວກຢິວເຄີຍຊຸມນຸມກັນ.
ເຮົາບໍ່ໄດ້ສອນສິ່ງໃດຢ່າງລັບລີ້ເລີຍ.21ທ່ານຖາມເຮົາເຮັດຫຍັງ? ຈົ່ງຖາມຄົນທີ່ຟັງເຮົາວ່າ ເຮົາເວົ້າອັນໃດກັບພວກເຂົາ
ເຂົາຮູ້ວ່າເຮົາສອນອັນໃດ.”
22ເມື່ອພຣະອົງຊົງກ່າວຢ່າງນັ້ນແລ້ວ, ເຈົ້າໜ້າທີ່ຄົນຫນຶ່ງທີ່ຢືນຢູ່ທີ່ນັ້ນໄດ້ຕົບພຣະພັກພຣະເຢຊູແລ້ວກ່າວວ່າ, “ເຈົ້າຕອບມະຫາປະໂລ-
ຫິດຢ່າງນັ້ນຫລື?”23ພຣະເຢຊູຕອບລາວວ່າ, “ຖ້າເຮົາເວົ້າຜິດ, ກໍຈົ່ງເປັນພະຍານໃນສິ່ງທີ່ຜິດນັ້ນ, ແຕ່ຖ້າເຮົາເວົ້າຖືກ,
ທ່ານຕົບເຮົາເຮັດຫຍັງ?”24ອັນນາຈຶ່ງໃຫ້ພາພຣະເຢຊູເຊິ່ງຖືກມັດຢູ່ນັ້ນໄປຫາກາຢະຟາມະຫາປະໂລຫິດ.
25ຂະນະນັ້ນຊີໂມນເປໂຕກຳລັງຢືນຜີງໄຟຢູ່. ຄົນເຫລົ່ານັ້ນຖາມເປໂຕວ່າ, “ເຈົ້າເປັນສາວົກຂອງຄົນນັ້ນເຫມືອນກັນບໍ່ແມ່ນຫລື” ເປໂຕປະຕິ-
ເສດວ່າ, “ບໍ່ແມ່ນ.”26ຂ້ອຍໃຊ້ຄົນຫນຶ່ງຂອງມະຫາປະໂລຫິດ, ຊຶ່ງເປັນພີ່ນ້ອງກັບຄົນທີ່ເປໂຕຟັນຫູຂາດກໍຖາມວ່າ,
“ຂ້ອຍເຫັນເຈົ້າກັບຄົນນັ້ນໃນສວນບໍ່ແມ່ນຫລື?”27ເປໂຕປະຕິເສດອີກເທື່ອຫນຶ່ງ, ແລະທັນໃດນັ້ນໄກ່ກໍຂັນ
28ແລ້ວພວກເຂົາກໍພາພຣະເຢຊູອອກຈາກເຮືອນຂອງກາຢະຟາໄປຍັງສານປົກຄອງ ຂະນະນັ້ນຍັງເປັນເວລາເຊົ້າມືດ,
ແລະພວກເຂົາບໍ່ໄດ້ເຂົ້າໄປໃນສານນັ້ນ ເພາະຢ້ານວ່າຈະບໍ່ສະອາດແລະຈະໄດ້ກິນປັດສະຄາໄດ້.29ປີລາດຈຶ່ງອອກມາຫາພວກເຂົາແລະຖາມວ່າ,
“ພວກທ່ານມີເລື່ອງອັນໃດມາຟ້ອງຄົນນີ້?”30ພວກເຂົາຕອບທ່ານວ່າ, “ຖ້າເຂົາບໍ່ເປັນຜູ້ຮ້າຍ, ພວກເຮົາກໍຄົງຈະບໍ່ມອບຕົວລາວໄວ້ໃຫ້ທ່ານ.”
31ປີລາດກ່າວກັບພວກເຂົາວ່າ, “ພວກທ່ານຈົ່ງເອົາຄົນນີ້ໄປພິພາກສາຕາມກົດຫມາຍຂອງພວກທ່ານເອງເຖີດ” ພວກຢິວຈຶ່ງຮຽນວ່າ, “ກົດ-
ຫມາຍຫ້າມພວກເຮົາປະຫານຊີວິດຜູ້ໃດຜູ້ຫນຶ່ງ.”32ທັງນີ້ເພື່ອໃຫ້ເປັນຈິງຕາມຖ້ອຍຄຳຂອງພຣະເຢຊູຊຶ່ງກ່າວໄວ້ວ່າ ພຣະອົງຈະສິ້ນພຣະ-
ຊົນແບບໃດ.
33ປີລາດຈຶ່ງເຂົ້າໄປໃນສານປົກຄອງອີກ ແລະເອີ້ນພຣະເຢຊູມາແລ້ວຖາມວ່າ, “ເຈົ້າເປັນກະສັດຂອງພວກຢິວຫລື?”34ພຣະເຢຊູຕອບວ່າ,
“ທ່ານຖາມຢ່າງນັ້ນຕາມຄວາມເຂົ້າໃຈຂອງທ່ານເອງ ຫລືວ່າຄົນອື່ນບອກທ່ານເຖິງເລື່ອງຂອງເຮົາ?”35ປີລາດທູນຕອບວ່າ, “ເຮົາເປັນຢິວຫລື?
ຊົນຊາດຂອງເຈົ້າເອງແລະພວກຫົວຫນ້າປະໂລຫິດໄດ້ມອບເຈົ້າໄວ້ໃຫ້ເຮົາ. ເຈົ້າເຮັດອັນໃດ?”
36ພຣະເຢຊູຕອບວ່າ, “ຣາຊະອຳນາດຂອງເຮົາບໍ່ໄດ້ເປັນຂອງໂລກນີ້ ຖ້າຣາຊະອຳນາດຂອງເຮົາມາຈາກໂລກນີ້ ຄົນຂອງເຮົາກໍຄົງຈະຕໍ່-
ສູ້ບໍ່ໃຫ້ເຮົາຖືກມອບໄວ້ແກ່ພວກຢິວ ແຕ່ຣາຊະອຳນາດຂອງເຮົາບໍ່ໄດ້ມາຈາກໂລກນີ້.”37ປີລາດຈຶ່ງທູນພຣະອົງວ່າ, “ຖ້າຢ່າງນັ້ນເຈົ້າເປັນກະ-
ສັດຕີ້?” ພຣະເຢຊູຊົງຕອບວ່າ, “ທ່ານເວົ້າວ່າເຮົາເປັນກະສັດ. ເພາະເຫດນີ້ເຮົາຈຶ່ງເກີດມາ, ແລະເຂົ້າມາໃນໂລກ ເພື່ອເປັນພະ-
ຍານໃຫ້ກັບຄວາມຈິງ. ທຸກຄົນທີ່ເປັນຝ່າຍຄວາມຈິງຍ່ອມຟັງສຽງຂອງເຮົາ.”
38ປີລາດທູນຖາມພຣະອົງວ່າ, “ຄວາມຈິງຄືອັນໃດ?” ເມື່ອຖາມຢ່າງນັ້ນແລ້ວ ປີລາດກໍອອກໄປຫາພວກຢິວອີກ ແລະບອກພວກເຂົາວ່າ,
“ເຮົາບໍ່ເຫັນວ່າຄົນນີ້ມີຄວາມຜິດ."39ແຕ່ພວກທ່ານມີທຳນຽມໃຫ້ເຮົາປ່ອຍຄົນໜຶ່ງໃຫ້ພວກທ່ານໃນເທສະການປັດສະຄາ
ທ່ານຢາກໃຫ້ເຮົາປ່ອຍກະສັດຂອງພວກຢິວຫລື?”40ພວກເຂົາຮ້ອງຕອບວ່າ, “ຢ່າປ່ອຍຄົນນີ້ ແຕ່ໃຫ້ປ່ອຍບາຣາບາ.” ສ່ວນບາຣາ-
ບານັ້ນເປັນໂຈນ.

 generated on Tue Jun 17 19:01:42 2025

19 [1]ແລ້ວປີລາດຈຶ່ງໃຫ້ເອົາພຣະເຢຊູໄປ ແລະຂ້ຽນຕີພຣະອົງ.[2]ພວກທະຫານໄດ້ເອົາມົງກຸດໜາມ ສຸບໃສ່ພຣະສຽນຂອງພຣະເຢຊູ ແລະ
ໃຫ້ພຣະອົງຄຸມເສື້ອສີມ່ວງ.[3]ແລ້ວພວກເຂົາກໍມາຫາພຣະອົງທູນວ່າ, “ຂ້າແດ່ກະສັດຂອງພວກຢິວ! ຂໍຊົງພຣະຈະເຣີນ”
ແລ້ວພວກເຂົາກໍຕົບພຣະພັກພຣະອົງ.

[4]ແລ້ວປີລາດກໍອອກໄປດ້ານນອກອີກ ແລະ ໄດ້ກ່າວກັບພວກເຂົາວ່າ, “ເບິ່ງແມ, ເຮົາພາຄົນນີ້ອອກມອບໃຫ້ພວກທ່ານ
ເພາະຮູ້ວ່າເຮົາບໍ່ເຫັນຄວາມຜິດຈັກປະການໃນຕົວເພິ່ນເລີຍ.”[5]ພຣະເຢຊູເຈົ້າຈຶ່ງສະເດັດອອກມາ, ສວມພວງມະລັຍທີ່ເຮັດດ້ວຍເຄືອໜາມນັ້ນ
ແລະ ຊົງຄຸມດ້ວຍເສື້ອສີມ່ວງ. ປີລາດກ່າວກັບພວກເຂົາວ່າ, “ເບິ່ງຊາຍຄົນນີ້ແມ!”[6]ເມື່ອພວກຫົວໜ້າປະໂລຫິດ ແລະ ພວກເຈົ້າໜ້າ-
ທີ່ໄດ້ເຫັນພຣະອົງເຂົາກໍໂຮ່ຮ້ອງຂຶ້ນວ່າ, “ຄຶງມັນ, ຄຶງມັນເສັຽ!” ປີລາດກ່າວກັບເຂົາວ່າ, “ພວກເຈົ້າຈົ່ງພາເຂົາໄປຄຶງເອົາເອງ,
ເພາະຝ່າຍເຮົາບໍ່ເຫັນວ່າເຂົາມີຄວາມຜິດເລີຍ.”
[7]ພວກຢິວໄດ້ຕອບທ່ານວ່າ, “ພວກເຮົາມີກົດໝາຍ, ແລະ ຕາມກົດໝາຍນັ້ນ ຄົນນີ້ຄວນຕາຍ ເພາະມັນຕັ້ງຕົວເປັນພຣະບຸດຂອງພຣະ-
ເຈົ້າ.”[8]ເມື່ອປີລາດໄດ້ຍິນດັ່ງນັ້ນ, ທ່ານກໍຕົກໃຈຢ້ານຫລາຍຂຶ້ນ.[9]ທ່ານຈຶ່ງເຂົ້າໄປໃນສານປົກຄອງອີກ ແລະ ໄດ້ທູນຖາມພຣະເຢຊູວ່າ,
“ເຈົ້າມາຈາກໃສ?” ແຕ່ພຣະເຢຊູບໍ່ໄດ້ຕອບປະການໃດ.
[10]ປີລາດຈຶ່ງທູນຕໍ່ພຣະອົງວ່າ, “ເຈົ້າຈະບໍ່ເວົ້າກັບເຮົາບໍ? ເຈົ້າບໍ່ຮູ້ຫລືວ່າ ເຮົາມີສິດອຳນາດຈະປ່ອຍເຈົ້າໄດ້, ແລະ
ມີສິດອຳນາດຄຶງເຈົ້າໄວ້ທີ່ໄມ້ກາງແຂນໄດ້?”[11]ພຣະເຢຊູຕອບເຂົາວ່າ, “ທ່ານບໍ່ມີສິດອຳນາດເໜືອເຮົາ ເວັ້ນແຕ່ອຳນາດທີ່ປຣະ-
ທານແກ່ທ່ານມາຈາກເບື້ອງເທິງ. ເພາະເຫດນີ້, ຄົນທີ່ມອບເຮົາໄວ້ກັບທ່ານຈຶ່ງມີຄວາມຜິດບາບຫລາຍກວ່າທ່ານ.”
[12]ດ້ວຍຄຳຕອບນີ້, ປີລາດກໍໄດ້ຊອກຫາໂອກາດທີ່ຈະປ່ອຍພຣະອົງ, ແຕ່ພວກຢິວໄດ້ໂຮ່ຮ້ອງສຽງດັງຂຶ້ນວ່າ, “ຖ້າທ່ານປ່ອຍຄົນນີ້,
ທ່ານກໍບໍ່ເປັນມິດຂອງກາຍຊາ. ທຸກຄົນທີ່ຕັ້ງຕົວເປັນກະສັດກໍຕໍ່ຕ້ານກາຍຊາ.”[13]ເມື່ອປີລາດໄດ້ຍິນດັ່ງນັ້ນ, ທ່ານຈຶ່ງພາພຣະເຢຊູອອກມາ
ແລ້ວນັ່ງບັນລັງພິພາກສາໃນບ່ອນທີ່ເອີ້ນວ່າ "ເດີນປູຫີນ" ພາສາເຮັບເຣີເອີ້ນວ່າ "ຄັບບາທາ."
[14]ບັດນີ້ວັນນັ້ນເປັນວັນຈັດແຈ່ງປັດສະຄາ ເວລາປະມານທ່ຽງວັນ, ປີລາດກ່າວກັບພວກຢິວວ່າ “ນີ້ຄືກະ-
ສັດຂອງພວກທ່ານ!”[15]ພວກເຂົາໂຮ່ຮ້ອງສຽງດັງຂຶ້ນວ່າ, “ເອົາມັນໄປ, ເອົາມັນໄປ, ເອົາໄປຄຶງທີ່ໄມ້ກາງແຂນ!” ປີລາດຖາມພວກເຂົາວ່າ,
“ຈະໃຫ້ເຮົາຄຶງກະສັດຂອງພວກທ່ານຫລື?” ພວກຫົວໜ້າປະໂລຫິດຕອບວ່າ, “ພວກເຮົາບໍ່ມີກະສັດອື່ນເວັ້ນແຕ່ກາຍ-
ຊາ.”[16]ແລ້ວປີລາດກໍມອບພຣະເຢຊູໃຫ້ເຂົາໄປຄຶງໄວ້ທີ່ໄມ້ກາງແຂນ.
[17]ແລ້ວພວກເຂົາຈຶ່ງພາພຣະເຢຊູເຈົ້າອອກໄປ ແລະ ໃຫ້ພຣະອົງຊົງແບກເອົາໄມ້ກາງແຂນຂອງພຣະອົງ, ເພື່ອສະເດັດໄປເຖິງບ່ອນທີ່ເອີ້ນວ່າ
"ກະໂຫລກຫົວ" ພາສາເຮັບເຣີເອີ້ນວ່າໂຄລະໂຄທາ.[18]ທີ່ນັ້ນພວກເຂົາໄດ້ຄຶງພຣະອົງໄວ້ທີ່ໄມ້ກາງແຂນກັບອີກສອງຄົນ ຄົນລະຂ້າງ, ໂດຍມີພຣະ-
ເຢຊູຊົງຢູ່ທາງກາງ.
[19]ປີລາດໃຫ້ຂຽນປ້າຍຕິດໄວ້ເທິງໄມ້ກາງແຂນອ່ານວ່າ: “ເຢຊູໄທນາຊາເຣັດ, ກະສັດຂອງຊາດຢິວ.”[20]ຄົນຢິວຫລາຍຄົນໄດ້ອ່ານປ້າຍນີ້
ເພາະບ່ອນທີ່ເຂົາຄຶງພຣະເຢຊູນັ້ນຢູ່ໃກ້ກັບເມືອງ. ປ້າຍນັ້ນຂຽນເປັນພາສາເຮັບເຣີ, ພາສາໂຣມ, ແລະ ພາສາກຣີກ.
[21]ພວກຫົວໜ້າປະໂລຫິດຂອງຊາດຢິວຈຶ່ງຮຽນປີລາດວ່າ, “ຢ່າຂຽນວ່າ, ‘ກະສັດຂອງຊາດຢິວ’ ແຕ່ຂຽນວ່າ ‘ຄົນນີ້ບອກວ່າ "ເຮົາເປັນກະ-
ສັດຂອງຊາດຢິວ"’.”[22]ປີລາດຕອບວ່າ, “ສິ່ງໃດທີ່ເຮົາຂຽນແລ້ວກໍແລ້ວໄປ.”
[23]ເມື່ອພວກທະຫານຄຶງພຣະເຢຊູໄວ້ທີ່ໄມ້ກາງແຂນແລ້ວ, ພວກເຂົາກໍເອົາເຄື່ອງຊົງຂອງພຣະອົງມາແບ່ງເປັນສີ່ພູດ, ໃຫ້ປັນກັນຜູ້ລະພູດ,
ແຕ່ເອົາເສື້ອຊັ້ນໃນພຣະອົງຊຶ່ງບໍ່ມີດູກ ຕຳເປັນຜືນດຽວທັງຜືນ.[24]ສະນັ້ນພວກເຂົາຈຶ່ງປຶກສາກັນວ່າ, “ເຮົາຢ່າຈີກແບ່ງກັນເທາະ ແຕ່ໃຫ້ຈົກສະ-
ຫລາກກັນ ຈະຮູ້ວ່າໃຜຈະໄດ້.” ທັງນີ້ເພື່ອໃຫ້ເປັນໄປຕາມຂໍ້ພຣະຄັມພີທີ່ຂຽນໄວ້ວ່າ, “ເສື້ອຜ້າຂອງຂ້າພຣະອົງເຂົາແບ່ງກັນ ແລະ
ເສື້ອຂອງຂ້າພຣະອົງເຂົາຈົກສະຫລາກກັນ.”
[25]ພວກທະຫານເຮັດດັ່ງນັ້ນ ຄົນທີ່ຢືນຢູ່ຂ້າງຢືນຢູ່ຂ້າງໄມ້ກາງແຂນຂອງພຣະເຢຊູແມ່ນມີມານດາ, ກັບນ້າສາວຂອງພຣະອົງ, ກັບ ນາງມາຣີ -
ອາເມັຽຂອງກະໂລປາ, ແລະນາງມາຣີອາໄທມັກດາລາ.[26]ເມື່ອພຣະເຢຊູເຫັນມານດາຂອງພຣະອົງ ແລະສາວົກທີ່ພຣະອົງຊົງຮັກຢືນຢູ່ໃກ້ໆ,
ພຣະອົງຈຶ່ງຊົງກ່າວກັບມານດາວ່າ, “ນາງເອີຍ, ນີ້ຄືລູກຂອງທ່ານ!”[27]ແລ້ວພຣະອົງກ່າວກັບສາວົກຄົນນັ້ນວ່າ, “ນີ້ຄືມານດາຂອງທ່ານ!”
ແລ້ວສາວົກຄົນນັ້ນກໍຮັບມານດາມາຢູ່ໃນເຮືອນຂອງຕົນຕັ້ງແຕ່ເວລານັ້ນ.
[28]ຫລັງຈາກນັ້ນ, ການຊົງຊາບວ່າບັດນີ້ທຸກສິ່ງສຳເລັດແລ້ວ ແລະ ເພື່ອໃຫ້ເປັນຈິງຕາມພຣະຄັມພີ ພຣະເຢຊູເຈົ້າຈຶ່ງກ່າວວ່າ,
“ເຮົາຫິວນ້ຳ.”[29]ທີ່ນັ້ນມີອ່າງໃສ່ເຫລົ້າແວງສົ້ມວາງຢູ່, ພວກທະຫານຈຶ່ງເອົາຟອງນ້ຳຈຸ່ມເອົາເຫລົ້າແວງສົ້ມ ສຽບໃສ່ປາຍໄມ້ ແລະ
ຍົກໄມ້ໃສ່ທີ່ພຣະໂອດຂອງພຣະອົງ.[30]ເມື່ອພຣະເຢຊູຊົງຮັບເຫລົ້າແວງສົ້ມແລ້ວ ພຣະອົງກໍກ່າວວ່າ, “ສຳເລັດແລ້ວ”
ແລະເມື່ອຊົງກົ້ມພຣະສຽນລົງສິ້ນພະຊົນ.
[31]ວັນນັ້ນເປັນມື້ຈັດແຈ່ງ ພວກຢິວຈຶ່ງຂໍໃຫ້ປີລາດທຸບຂາຂອງຜູ້ທີ່ຖືກຄຶງໃຫ້ຫັກ, ແລະ ເພື່ອບໍ່ຢາກໃຫ້ສົບນັ້ນຄ້າງຢູ່ທີ່ໄມ້ກາງແຂນໃນວັນສະບາໂຕ
(ເພາະວັນສະບາໂຕນັ້ນເປັນວັນສຳຄັນ).[32]ດັ່ງນັ້ນ ພວກທະຫານຈຶ່ງທຸບຂາຂອງຜູ້ທີ່ຫນຶ່ງ ແລະ ຂາຂອງອີກຄົນຜູ້ທີ່ຖືກຄຶງຢູ່ກັບພຣະເຢຊູ.
[33]ແຕ່ເມື່ອເຂົາມາເຖິງພຣະເຢຊູ, ແລະ ເຫັນວ່າພຣະອົງສິ້ນພຣະຊົນແລ້ວ, ພວກເຂົາຈຶ່ງບໍ່ໄດ້ທຸບຂາຂອງພຣະອົງ.
[34]ແຕ່ແນວໃດກໍດີ, ທະຫານຄົນຫນຶ່ງໄດ້ເອົາຫອກແທງທີ່ຂ້າງຂອງພຣະອົງ, ແລະ ໂລຫິດກັບນ້ຳກໍໄຫລອອກມາທັນທີ.[35]ຄົນນັ້ນທີ່ເຫັນກໍເປັນພະ-
ຍານ ແລະ ຄຳພະຍານຂອງລາວກໍເປັນຈິງ, ແລະ ລາວກໍຮູ້ວ່າພຣະອົງເວົ້ານັ້ນເປັນຄວາມຈິງ ເພື່ອພວກທ່ານຈະໄດ້ເຊື່ອ.
[36]ເພາະສິ່ງເຫລົ່ານີ້ເກີດຂຶ້ນເພື່ອໃຫ້ເປັນຈິງ ຕາມຂໍ້ພຣະຄັມພີທີ່ວ່າ “ກະດູກຂອງພຣະອົງຈະບໍ່ຖືກຫັກເສັຽຈັກເຫລັ້ມ.”[37]ແລະ ມີຂໍ້ພຣະ-
ຄັມພີອີກຂໍ້ຫນຶ່ງວ່າ, “ພວກເຂົາຈະແນມເບິ່ງພຣະອົງຜູ້ທີ່ເຂົາແທງ.”
[38]ຫລັງຈາກນັ້ນ ໂຢເຊັບໄທບ້ານອາຣີມາທາຍ ຊຶ່ງເປັນສາວົກຂອງພຣະເຢຊູ (ແຕ່ຢ່າງລັບໆ ເພາະຢ້ານພວກຢິວ) ກໍຂໍພຣະສົບພຣະເຢຊູຈາກປີ-
ລາດ ແລະປີລາດກໍອະນຸຍາດໃຫ້ ໂຢເຊັບຈຶ່ງມາອັນເຊີນພຣະສົບຂອງພຣະອົງໄປ.[39]ນີໂກເດມ ຄົນທີ່ທຳອິດໄດ້ມາຫາພຣະເຢຊູເວລາກາງ-
ຄືນກໍມາ ທ່ານນຳເອົາເຄື່ອງຫອມປະສົມ ຄືຢາງໄມ້ກັບຫາງແຂ້ ໜັກປະມານສາມສິບກິໂລ.

[40]ພວກເຂົາອັນເຊີນພຣະສົບຂອງພຣະເຢຊູລົງມາ ແລ້ວເອົາຜ້າປ່ານກັບເຄື່ອງຫອມພັນພຣະສົບນັ້ນ, ຕາມທຳນຽມມັດຽນສົບຂອງພວກຢິວ.
[41]ອັນຫນຶ່ງໃນບ່ອນພຣະອົງຊົງຖືກຄຶງໄວ້ນັ້ນມີສວນໜຶ່ງ; ໃນສວນນັ້ນມີອຸບໂມງໃຫມ່ທີ່ຍັງບໍ່ໄດ້ວາງສົບຜູ້ໃດຈັກເທື່ອ.
[42]ເນື່ອງຈາກວັນນັ້ນເປັນວັນຈັດແຈງຂອງພວກຢິວ ແລະ ເນື່ອງຈາກວ່າອຸໂມງນັ້ນຢູ່ໃກ້, ເຂົາຈຶ່ງບັນຈຸພຣະສົບຂອງພຣະເຢຊູໄວ້ທີ່ນັ້ນ.

20 [1]ບັດນີ້ໃນຕອນເຊົ້າວັນທຳອິດຂອງອາທິດ, ໃນຂະນະທີ່ຍັງມືດຢູ່, ມາຣີອາໄທມັກດາລາ ໄດ້ມາເຖິງອຸໂມງຝັງສົບ ແລະ
ນາງໄດ້ເຫັນກ້ອນຫີນທີ່ປິດປາກອຸບໂມງນັ້ນຖືກຍ້າຍອອກແລ້ວ.[2]ນາງຈຶ່ງແລ່ນໄປຫາຊີໂມນເປໂຕກັບສາວົກຄົນອື່ນທີ່ພຣະເຢຊູຊົງຮັກ-
ແພງນັ້ນ, ແລະ ເວົ້າກັບເຂົາວ່າ, “ເຂົາເອົາອົງພຣະຜູ້ເປັນເຈົ້າອອກຈາກອຸໂມງແລ້ວ, ແລະ ເຮົາບໍ່ຮູ້ວ່າເຂົາເອົາພຣະອົງໄປໄວ້ທີ່ໃດ.”

[3]ເປໂຕຈຶ່ງອອກໄປທີ່ອຸບໂມງກັບສາວົກຄົນອື່ນນັ້ນ.[4]ເຂົາທັງສອງພ້ອມກັນແລ່ນ, ແຕ່ສາວົກຄົນນັ້ນແລ່ນໄວກວ່າເປໂຕຈຶ່ງມາຮອດອຸບໂມງກ່ອນ.
[5]ລາວກົ້ມລົງແນມເບິ່ງເຫັນຜ້າປ່ານກອງຢູ່ ແຕ່ລາວບໍ່ໄດ້ເຂົ້າໄປຂ້າງໃນ.
[6]ຊີໂມນເປໂຕຕາມຫລັງມານັ້ນກໍມາຮອດ ແລ້ວເຂົ້າໄປໃນອຸໂມງເຫັນຜ້າປ່ານກອງຢູ່.[7]ສ່ວນຜ້າປົກພຣະສຽນຂອງພຣະອົງ ບໍ່ໄດ້ກອງຢູ່ກັບຜ້າອື່ນ
ແຕ່ພັບໄວ້ຕ່າງຫາກ.
[8]ສ່ວນສາວົກຄົນນັ້ນທີ່ມາເຖິງກ່ອນ, ກໍໄດ້ເຂົ້າໄປເຫມືອນກັນ ກໍເຫັນແລະເຊື່ອ.[9]ແຕ່ໃນຂະນະນັ້ນເຂົາຍັງບໍ່ເຂົ້າໃຈຂໍ້ພຣະຄັມພີທີ່ຂຽນໄວ້ວ່າ
ພຣະອົງຈະຕ້ອງເປັນຄືນມາຈາກຕາຍ.[10]ແລ້ວສາວົກທັງສອງນັ້ນກໍກັບໄປຍັງບ້ານຂອງຕົນ.
[11]ສ່ວນມາຣີອາຢືນຮ້ອງໄຫ້ຢູ່ນອກອຸໂມງ. ຂະນະທີ່ຍັງຮ້ອງໄຫ້ຢູ່, ນາງກົ້ມຫລຽວໄປທາງອຸໂມງ.[12]ແລະ
ແລເຫັນເທວະດາສອງຕົນນັ່ງຢູ່ບ່ອນທີ່ເຂົາວາງພຣະສົບຂອງພຣະເຢຊູ ຕົນຫນຶ່ງຢູ່ເບື້ອງຫົວ, ອີກຕົນຫນຶ່ງຢູ່ເບື້ອງພຣະບາດ.[13]ເທ-
ວະດາທັງສອງເວົ້າກັບມາຣີອາວ່າ, “ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ?” ນາງຕອບວ່າ, “ເພາະເຂົາເອົາພຣະ-
ສົບອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍໄປ, ແລະຂ້ານ້ອຍບໍ່ຮູ້ວ່າເຂົາເອົາໄປວາງໄວ້ບ່ອນໃດ.”
[14]ເມື່ອມາຣີອາເວົ້າດັ່ງນັ້ນແລ້ວ, ນາງຫລຽວຫລັງກັບມາ ແລະ ໄດ້ເຫັນພຣະເຢຊູ: ເຈົ້າຢືນຢູ່, ແຕ່ນາງບໍ່ຮູ້ວ່າແມ່ນພຣະອົງ.
[15]ພຣະເຢຊູເຈົ້າຖາມວ່າ, “ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຍັງ?" ເຈົ້າຊອກຫາຜູ້ໃດ?” ນາງຄິດວ່າພຣະອົງແມ່ນຄົນເຝົ້າສວນຈຶ່ງຕອບວ່າ,
“ທ່ານເອີຍ, ຖ້າທ່ານເອົາສົບພຣະອົງໄປ, ຂໍບອກໃຫ້ຂ້ານ້ອຍຮູ້ວ່າເອົາພຣະອົງໄປວາງໄວ້ທີ່ໃດ, ຂ້ານ້ອຍຈະໄປເອົາພຣະອົງໄປ”
[16]ພຣະເຢຊູກ່າວກັບນາງວ່າ, “ມາຣີອາເອີຍ” ມາຣີອາກໍຫັນຫນ້າມາ, ແລະ ທູນພຣະອົງເປັນພາສາເຮັບເຣີວ່າ, “ຣັບໂບນີ” (ທີ່ແປວ່າ “ພຣະອາ-
ຈານ").[17]ພຣະເຢຊູກ່າວກັບນາງວ່າ, “ຢ່າແຕະຕ້ອງເຮົາ, ເພາະເຮົາຍັງບໍ່ໄດ້ຂຶ້ນໄປຫາພຣະບິດາ, ແຕ່ເຈົ້າຈົ່ງໄປຫາພວກພີ່ນ້ອງຂອງເຮົາ
ແລະບອກເຂົາວ່າ ເຮົາກຳລັງຈະຂຶ້ນໄປຫາພຣະບິດາຂອງເຮົາ, ແລະ ພຣະບິດາຂອງພວກທ່ານ ໄປຫາພຣະເຈົ້າຂອງເຮົາ ແລະພຣະ-
ເຈົ້າຂອງພວກທ່ານ.”[18]ມາຣີອາຊາວມັກດາລາຈຶ່ງໄປບອກພວກສາວົກວ່າ, “ຂ້ານ້ອຍເຫັນອົງພຣະຜູ້ເປັນເຈົ້າແລ້ວ,” ແລະ
ນາງກໍເລົ່າໃຫ້ພວກເຂົາວ່າ ພຣະອົງໄດ້ກ່າວຄຳເຫລົ່ານີ້ແກ່ຕົນ.
[19]ຄ່ຳວັນນັ້ນເປັນວັນອາທິດ, ເມື່ອສາວົກອັດປະຕູຫ້ອງທີ່ເຂົາຢູ່ເພາະຢ້ານພວກຢິວ, ພຣະເຢຊູເຈົ້າກໍສະເດັດເຂົ້າມາ ແລະ ຊົງຢືນຢູ່ທ່າມ-
ກາງພວກເຂົາ ແລະ ກ່າວວ່າ, “ສັນຕິສຸກຈົ່ງດຳລົງຢູ່ກັບທ່ານທັງຫລາຍ.”[20]ເມື່ອພຣະອົງກ່າວດັ່ງນັ້ນແລ້ວ, ພຣະອົງຊົງໃຫ້ເຂົາເບິ່ງພຣະຫັດ ແລະ
ຂ້າງຂອງພຣະອົງ. ເມື່ອພວກສາວົກເຫັນອົງພຣະຜູ້ເປັນເຈົ້າແລ້ວກໍມີຄວາມຍິນດີ.
[21]ພຣະເຢຊູກ່າວກັບເຂົາອີກວ່າ, “ສັນຕິສຸກຈົ່ງດຳຣົງຢູ່ກັບທ່ານທັງຫລາຍ. ພຣະບິດາຊົງໃຊ້ເຮົາມາຢ່າງໃດ,
ເຮົາກໍໃຊ້ພວກທ່ານໄປຢ່າງນັ້ນ.”[22]ເມື່ອພຣະອົງກ່າວຢ່າງນັ້ນແລ້ວ, ຈຶ່ງຊົງເປົ່າລົມຫາຍໃຈເຫນືອພວກເຂົາ ແລະບອກວ່າ, “ຈົ່ງຮັບພຣະວິນຍານ-
ບໍຣິສຸດເຖີດ.[23]ຖ້າພວກທ່ານຈະຍົກຜິດບາບຂອງຜູ້ໃດ, ຄວາມຜິດບາບຂອງຜູ້ນັ້ນກໍຈະໄດ້ຮັບການຍົກເສັຽ;
ຖ້າພວກທ່ານບໍ່ຍົກຄວາມຜິດບາບໃຫ້ຢູ່ກັບຜູ້ໃດ, ບາບຂອງພວກເຂົາກໍຈະບໍ່ໄດ້ຮັບການອະພັຍ.”
[24]ໂທມາ, ທີ່ເອີ້ນກັນວ່າ ດີດຸມັດຊຶ່ງເປັນສາວົກຜູ້ຫນຶ່ງໃນສິບສອງຄົນນັ້ນ, ບໍ່ໄດ້ຢູ່ກັບເຂົາເມື່ອພຣະເຢຊູສະເດັດມາ.[25]ສາວົກອື່ນໆຈຶ່ງບອກໂທ-
ມາວ່າ, “ເຮົາເຫັນອົງພຣະຜູ້ເປັນເຈົ້າແລ້ວ.” ແຕ່ໂທມາຕອບພວກເຂົາວ່າ, “ຖ້າຂ້ອຍບໍ່ເຫັນຮອຍຕະປູທີ່ຝ່າພຣະຫັດ, ແລະ
ບໍ່ໄດ້ເອົານິ້ວມືຂອງຂ້ອຍແປະໃສ່ຮອຍຕະປູນັ້ນ, ແລະ ບໍ່ໄດ້ເອົາມືຂອງຂ້ອຍແປະໃສ່ຂ້າງເພິ່ນແລ້ວ, ຂ້ອຍຈະບໍ່ເຊື່ອ.”
[26]ຄັນລ່ວງໄປແປດວັນແລ້ວ ພວກສາວົກຂອງພຣະອົງກໍຢູ່ຮ່ວມກັນທີ່ເຮືອນນັ້ນອີກ ແລະໂທມາກໍຢູ່ກັບພວກເຂົາດ້ວຍ. ປະຕູກໍອັດໄວ້ແລ້ວ,
ແຕ່ພຣະເຢຊູສະເດັດເຂົ້າມາແລະຊົງຢືນຢູ່ທ່າມກາງເຂົາກ່າວວ່າ, “ສັນຕິສຸກຈົ່ງດຳລົງຢູ່ກັບທ່ານທັງຫລາຍ.”[27]ແລ້ວພຣະອົງກ່າວກັບໂທມາວ່າ,
“ຈົ່ງເດ່ນິ້ວມືຂອງທ່ານມາລູບທີ່ນີ້ ແລະ ເບິ່ງທີ່ຝາມືຂອງເຮົາ ເດ່ມືຂອງທ່ານມາຄຳໃສ່ຂ້າງຂອງເຮົາ ຢ່າສົງສັຍເລີຍ ແຕ່ຈົ່ງເຊື່ອ.”
[28]ໂທມາທູນຕອບວ່າ, “ອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ແລະພຣະເຈົ້າຂອງຂ້ານ້ອຍ.”[29]ພຣະເຢຊູໄດ້ກ່າວຕໍ່ລາວວ່າ,
“ເພາະທ່ານເຫັນເຮົາທ່ານຈຶ່ງເຊື່ອຫລື? ຄົນທີ່ບໍ່ເຫັນເຮົາແຕ່ເຊື່ອກໍເປັນສຸກ.”
[30]ພຣະເຢຊູຊົງເຮັດຫມາຍສຳຄັນອື່ນໆ ອີກຫລາຍປະການຕໍ່ຫນ້າພວກສາວົກ ຊຶ່ງບໍ່ໄດ້ຈົດໄວ້ໃນຫນັງສືເຫລັ້ມນີ້.[31]ແຕ່ການທີ່ຈົດບັນທຶກເຫດ-
ການເຫລົ່ານີ້ໄວ້ ກໍເພື່ອພວກທ່ານຈະໄດ້ເຊື່ອວ່າພຣະເຢຊູເປັນພຣະຄຣິດພຣະບຸດຂອງພຣະເຈົ້າ ແລະ ເມື່ອມີຄວາມເຊື່ອ ແລ້ວທ່ານກໍມີຊີ-
ວິດໂດຍພຣະນາມຂອງພຣະອົງ.

 generated on Tue Jun 17 19:01:42 2025

21 [1]ພາຍຫລັງສິ່ງເຫລົ່ານີ້ ພຣະເຢຊູເຈົ້າຊົງສະແດງພຣະອົງແກ່ພວກສາວົກອີກຄັ້ງຫນຶ່ງທີ່ທະເລຕີເບເຣັຽ. ພຣະອົງຊົງສະແດງພຣະ-
ອົງຢ່າງນີ້ຄື:[2]ຊີໂມນເປໂຕ ພ້ອມກັບໂທມາທີ່ເອີ້ນວ່າດີດຸມັດ, ນະທານາເອັນໄທບ້ານການາ ໃນແຂວງຄາລີ-
ເລ, ແລະ ລູກຊາຍທັງສອງຂອງເຊເບດາຍ, ແລະສາວົກຂອງພຣະເຢຊູອີກສອງຄົນ ກໍາລັງຢູ່ດ້ວຍກັນ.[3]ຊີໂມນເປໂຕໄດ້ບອກພວກເຂົາວ່າ,
“ຂ້ອຍຈະໄປຫາປາ” ພວກເຂົາຈຶ່ງເວົ້າວ່າ, “ເຮົາຈະໄປນໍາ” ແລ້ວພວກເຂົາກໍອອກໄປລົງເຮືອ, ແຕ່ຄືນນັ້ນເຂົາຈັບປາບໍ່ໄດ້ເລີຍ.

[4]ບັດນີ້, ເມື່ອເຖິງຮຸ່ງເຊົ້າ ພຣະເຢຊູຊົງຢືນຢູ່ທີ່ຝັ່ງ, ແຕ່ພວກສາວົກບໍ່ຮູ້ວ່າແມ່ນພຣະເຢຊູ.[5]ເພາະພຣະເຢຊູຊົງຖາມພວກເຂົາວ່າ, “ລູກເອີຍ,
ພວກເຈົ້າມີຫຍັງຈະກິນບໍ່?” ເຂົາຕອບວ່າ, “ບໍ່ມີ”[6]ພຣະອົງກ່າວກັບພວກເຂົາວ່າ “ຈົ່ງໂຍນມອງລົງເບື້ອງຂວາເຮືອແລ້ວຈະໄດ້ປາ”
ເຂົາຈຶ່ງໂຍນມອງລົງ ແລະ ກໍໄດ້ປາຈໍານວນຫລວງຫລາຍ ຈົນດຶງມອງຂຶ້ນບໍ່ໄດ້.
[7]ແລ້ວພວກສາວົກ ຜູ້ທີ່ພຣະເຢຊູຊົງຮັກ ບອກເປໂຕວ່າ, “ແມ່ນອົງພຣະຜູ້ເປັນເຈົ້າ.” ເມື່ອຊີໂມນເປໂຕໄດ້ຍິນວ່າ ເປັນອົງພຣະຜູ້ເປັນເຈົ້າ,
ເພິ່ນໄດ້ຈັບເອົາເສື້ອມານຸ່ງ (ເພາະເພິ່ນບໍ່ໄດ້ນຸ່ງເຄື່ອງ), ແລ້ວກໍໂຕນລົງນໍ້າທະເລ.[8]ແຕ່ພວກສາວົກຄົນອື່ນໆນັ້ນໄດ້ນັ່ງເຮືອມາ,
(ເພາະພວກເຂົາບໍ່ຢູ່ໄກຈາກຝັ່ງຫລາຍ, ໄກປະມານຫນຶ່ງຮ້ອຍແມັດເທົ່ານັ້ນ),[9]ເມື່ອພວກເຂົາຂຶ້ນເຖິງຝັ່ງກໍເຫັນຖ່ານຕິດໄຟຢູ່,
ມີປາວາງຢູ່ຂ້າງເທິງ, ແລະ ມີເຂົ້າຈີ່ດ້ວຍ.
[10]ພຣະເຢຊູເຈົ້າຊົງບອກກັບພວກເຂົາວ່າ, “ເອົາປາທີ່ຫາກໍໄດ້ມື້ກີ້ນີ້ມາບາງໂຕ.”[11]ຊີໂມນເປໂຕຈຶ່ງລົງໄປໃນເຮືອ ແລ້ວດຶງມອງຂຶ້ນຝັ່ງ,
ມອງນັ້ນເຕັມໄປດ້ວຍປາໂຕໃຫຍ່ໆ; ມີຫນຶ່ງຮ້ອຍຫ້າສິບສາມໂຕ, ເຖິງວ່າຈະມີປາຫລາຍປານນັ້ນມອງກໍບໍ່ຂາດ.
[12]ພຣະເຢຊູເຈົ້າບອກກັບພວກເຂົາວ່າ, “ມາຮັບປະທານອາຫານເຊົ້ານໍາກັນເທາະ.” ພວກສາວົກບໍ່ມີໃຜກ້າຖາມພຣະອົງວ່າ, “ທ່ານເປັນໃຜ?”
ເພາະພວກເຂົາຊົງຮູ້ຢູ່ແລ້ວວ່າເປັນອົງພຣະຜູ້ເປັນເຈົ້າ.[13]ພຣະເຢຊູເຈົ້າຊົງເຂົ້າມາ, ໄດ້ຈັບເອົາເຂົ້າຈີ່, ແລະ ເອົາໃຫ້ພວກເຂົາ, ແລະ ຈັບເອົາປາ
ແລະ ຢາຍປາໃຫ້ເຫມືອນກັນ.[14]ນີ້ເປັນເທື່ອທີສາມທີ່ພຣະເຢຊູຊົງສະແດງພຣະອົງແກ່ພວກສາວົກ
ຫລັງຈາກທີ່ພຣະອົງຖືກຊົງເປັນຄືນມາຈາກຕາຍ.
[15]ເມື່ອຮັບປະທານອາຫານເຊົ້າແລ້ວ, ພຣະເຢຊູເຈົ້າໄດ້ກ່າວກັບຊີໂມນເປໂຕວ່າ, “ຊີໂມນລູກໂຢຮັນເອີຍ,
ທ່ານຮັກເຮົາຫລາຍກວ່າສິ່ງເຫລົ່ານີ້ບໍ່?” ເປໂຕທູນຕໍ່ພຣະອົງວ່າ “ໂດຍພຣະອົງເຈົ້າ, ພຣະອົງຊົງຊາບວ່າຂ້ານ້ອຍຮັກພຣະອົງ.” ພຣະ-
ອົງກ່າວສັ່ງເຂົາວ່າ, “ຈົ່ງລ້ຽງດູລູກແກະຂອງເຮົາເຖີດ.”[16]ພຣະອົງກ່າວກັບເຂົາເທື່ອທີສອງວ່າ, “ຊີໂມນລູກໂຢຮັນເອີຍ, ເຈົ້າຮັກເຮົາບໍ່?” ເປ-
ໂຕທູນຕອບພຣະອົງວ່າ, “ໂດຍພຣະອົງເຈົ້າ, ພຣະອົງຊົງຊາບວ່າຂ້ານ້ອຍຮັກພຣະອົງ.” ພຣະອົງກ່າວສັ່ງກັບເຂົາວ່າ,
“ຈົ່ງລ້ຽງດູແກະຂອງເຮົາເຖີດ.”
[17]ພຣະອົງໄດ້ກ່າວກັບເປໂຕເທື່ອທີສາມວ່າ, “ຊີໂມນລູກໂຢຮັນເອີຍ, ເຈົ້າຮັກເຮົາບໍ່?” ເປໂຕເສັຽໃຈຫລາຍທີ່ພຣະ-
ເຢຊູເຈົ້າຊົງຖາມທ່ານເທື່ອທີສາມວ່າ, “ເຈົ້າຮັກເຮົາບໍ່?” ເປໂຕຈຶ່ງທູນຕອບພຣະອົງວ່າ, “ອົງພຣະຜູ້ເປັນເຈົ້າ, ພຣະອົງຊົງຊາບທຸກສິ່ງ
ພຣະອົງຊົງຮູ້ດີວ່າຂ້ານ້ອຍຮັກພຣະອົງ” ພຣະເຢຊູເຈົ້າໄດ້ກ່າວສັ່ງກັບເຂົາວ່າ, “ຈົ່ງລ້ຽງດູແກະຂອງເຮົາເຖີດ.[18]ເຮົາບອກໃນຄວາມຈິງ,
ຕາມຈິງແກ່ທ່ານວ່າ, ເມື່ອທ່ານຍັງຫນຸ່ມ, ທ່ານກໍຄາດແອວຂອງທ່ານ ແລະ ຍ່າງທ່ຽວໄປມາໃສຕາມໃຈເຈົ້າມັກ, ແຕ່ເມື່ອເຖົ້າແລ້ວ,
ທ່ານຈະຢຽດມືອອກ, ແລະ ຈະມີຄົນອື່ນມາຄາດແອວທ່ານ ແລະ ຈູງພາໄປບ່ອນເຈົ້າບໍ່ປາຖນາຈະໄປ.”
[19]ບັດນີ້ພຣະເຢຊູເຈົ້າໄດ້ກ່າວດັ່ງນີ້ ກໍເພື່ອຊີ້ໃຫ້ເຫັນວ່າເປໂຕຈະຖວາຍພຣະກຽດແດ່ພຣະເຈົ້າດ້ວຍການຕາຍຢ່າງໃດ. ເມື່ອພຣະ-
ອົງໄດ້ຊົງກ່າວດັ່ງນີ້ແລ້ວ, ພຣະອົງຈຶ່ງກ່າວກັບເປໂຕວ່າ, “ຈົ່ງຕາມເຮົາມາເຖີດ.”
[20]ເປໂຕໄດ້ຫລຽວຄືນຫລັງ ແລະ ໄດ້ເຫັນສາວົກຜູ້ທີ່ພຣະເຢຊູຊົງຮັກກໍາລັງຕາມພວກເຂົາມາ, ຄືຜູ້ທີ່ເນີ່ງກາຍລົງອີງຂ້າງຂອງພຣະ-
ອົງເມື່ອຮັບປະທານອາຫານຄໍ່າ ແລະ ໄດ້ທູນຖາມວ່າ, “ອົງພຣະຜູ້ເປັນເຈົ້າເອີຍ, ຄົນທີ່ທໍຣະຍົດພຣະອົງເປັນຜູ້ໃດ?”[21]ເມື່ອເປໂຕໄດ້ເຫັນສາ-
ວົກຄົນນັ້ນຈຶ່ງໄດ້ທູນຖາມພຣະເຢຊູວ່າ, “ອົງພຣະຜູ້ເປັນເຈົ້າ, ຄົນນີ້ຈະເປັນຢ່າງໃດ?”
[22]ພຣະເຢຊູໄດ້ຕອບກັບເຂົາວ່າ, “ຖ້າເຮົາຢາກໃຫ້ເຂົາຢູ່ຈົນກວ່າເຮົາຈະມາ, ມັນກ່ຽວຫຍັງກັບທ່ານ? ຈົ່ງຕາມເຮົາມາເຖີດ.”[23]ເພາະສັນນັ້ນ,
ຂໍ້ຄວາມນີ້ ທີ່ວ່າສາວົກຜູ້ນັ້ນຈະບໍ່ຕາຍຈຶ່ງຊ່າລືກັນໄປທ່າມກາງພວກພີ່ນ້ອງ. ພຣະເຢຊູກໍບໍ່ໄດ້ກ່າວກັບເປໂຕວ່າ ສາວົກຜູ້ນັ້ນຈະບໍ່ຕາຍ,
ແຕ່ກ່າວວ່າ, “ຖ້າເຮົາຢາກໃຫ້ເຂົາຢູ່ຈົນກວ່າເຮົາຈະມາ ມັນກ່ຽວຫຍັງກັບທ່ານຫນໍ?”
[24]ສາວົກຜູ້ນີ້ແຫລະທີ່ເປັນພະຍານເຖິງເຫດການເຫລົ່ານີ້, ແລະ ເປັນຄົນທີ່ບັນທຶກສິ່ງເຫລົ່ານີ້ໄວ້, ແລະ
ພວກເຮົາຊາບວ່າຄໍາພະຍານຂອງເຂົາເປັນຄວາມຈິງ.[25]ພຣະເຢຊູເຈົ້າຊົງເຮັດສິ່ງອື່ນໆອີກຫລາຍຢ່າງ. ຖ້າຈະຂຽນໃຫ້ຫມົດທຸກສິ່ງ, ຂ້າພຣະ-
ເຈົ້າຄາດວ່າຫມົດທັງໂລກກໍບໍ່ພໍໄວ້ ໃນຫນັງສືທີ່ຈະຂຽນນັ້ນ.

# ກິດຈະການ

1 [1]ໂອຟີໂລ, ໃນໜັງສືທີ່ຂ້າພະເຈົ້າໄດ້ຂຽນກ່ອນໜ້ານີ້, ທີ່ໄດ້ບອກທຸກສິ່ງທີ່ພຣະເຢຊູຄຣິດເຈົ້າໄດ້ຊົງເລີ່ມຕົ້ນເຮັດ ແລະ ສັ່ງສອນ,
[2]ຈົນເຖິງມື້ທີ່ພຣະອົງຖືກຮັບຂຶ້ນໄປ, ຫລັງຈາກພຣະອົງກ່າວສັ່ງຜ່ານພຣະວິນຍານບໍຣິສຸດເຈົ້າ ກັບບັນດາອັກຄະສາວົກທີ່ພຣະອົງຊົງເລືອກໄວ້.
[3]ຫລັງຈາກທີ່ພຣະອົງທົນທຸກທໍລະມານມາແລ້ວ, ພຣະອົງຊົງປະກົດພຣະອົງທີ່ມີຊີວິດຢູ່ກັບພວກເຂົາດ້ວຍຫລັກຖານຫລາຍປະການ.
ພຣະອົງຊົງປະກົດແກ່ພວກເຂົາເປັນເວລາສີ່ສິບວັນ, ແລະ ພຣະອົງຊົງກ່າວເຖິງຣາຊະອານາຈັກຂອງພຣະເຈົ້າ.

[4]ເມື່ອພຣະອົງຊົງປະຊຸມຮ່ວມກັບພວກເຂົາ, ພຣະອົງສັ່ງພວກເຂົາບໍ່ໃຫ້ອອກຈາກນະຄອນ ເຢຣູຊາເລັມ,
ແຕ່ໃຫ້ລໍຖ້າຮັບຕາມຄໍາສັນຍາຂອງພຣະບິດາເຈົ້າ, ທີ່ພຣະອົງໄດ້ກ່າວໄວ້ວ່າ, "ພວກທ່ານໄດ້ຍິນຈາກຂ້າພະເຈົ້າແລ້ວວ່າ.
[5]ໂຢຮັນໄດ້ຮັບບັບຕິສະມາດ້ວຍນ້ຳ, ແຕ່ອີກບໍ່ດົນພວກທ່ານຈະໄດ້ບັບຕິສະມາ ໃນພຣະວິນຍານບໍຣິສຸດເຈົ້າ."
[6]ເມື່ອພວກເຂົາມາປະຊຸມພ້ອມກັນ ພວກເຂົາກ່າວຖາມພຣະອົງວ່າ, "ອົງພຣະຜູ້ເປັນເຈົ້າ, ນີ້ເປັນເວລາທີ່ພຣະອົງຈະຕັ້ງຣາຊອານາ
ຈັກຂຶ້ນໃໝ່ໃຫ້ກັບຊົນຊາດ ອິດສະຣາເອນບໍ່?"[7]ພຣະເຢຊູຄຣິດເຈົ້າ ກ່າວກັບພວກເຂົາວ່າ, “ບໍ່ແມ່ນວຽກງານຫຍັງຂອງທ່ານທີ່ຈະຮູ້ເວລາ ແລະ
ຍາມກໍານົດທີ່ພຣະບິດາເຈົ້າກໍານົດໄວ້ໂດຍສິດທິອໍານາດຂອງພຣະອົງເອງ.[8]ແຕ່ພວກທ່ານຈະໄດ້ຮັບຣິດອໍານາດ,


generated on Tue Jun 17 19:01:42 2025

ເມື່ອພຣະວິນຍານບໍຣິສຸດເຈົ້າລົງມາເທິງທ່ານ, ແລະ ພວກທ່ານຈະເປັນພະຍານຝ່າຍເຮົາ ທັງໃນນະຄອນ ເຢຣູຊາເລັມ, ແລະ ທົ່ວແຂວງ ຢູດາຍ,
ແລະ ທົ່ວແຂວງຊາມາເຣຍ, ແລະ ຈົນເຖິງທີ່ສຸດຂອງແຜ່ນດິນໂລກ."
9ເມື່ອພຣະເຢຊູຄຣິດເຈົ້າຊົງກ່າວເຖິງສິ່ງເຫລົ່ານີ້ແລ້ວ, ຂະນະທີ່ພວກເຂົາຫລຽວເບິ່ງທ້ອງຟ້າ, ພຣະອົງກໍ່ຖືກຮັບຂຶ້ນໄປ,
ແລະມີເມກມາປິດບັງພຣະອົງຈາກສາຍຕາຂອງພວກເຂົາ.10ໃນຂະນະທີ່ພວກເຂົາກຳລັງແນມເບິ່ງທ້ອງຟ້າ ຕອນທີ່ພຣະອົງສະເດັດຂຶ້ນໄປ,
ທັນໃດນັ້ນ, ມີຊາຍສອງຄົນນຸ່ງເຄື່ອງຂາວຢືນຢູ່ຂ້າງພວກເຂົາ.11ພວກເຂົາຖາມວ່າ, "ທ່ານຊາວຄາລີເລທັງຫລາຍ,
ເປັນຫຍັງພວກທ່ານຈຶ່ງຢືນເບິ່ງຟ້າສະຫວັນຢູ່ທີ່ນີ້? ພະເຢຊູຄຣິດເຈົ້າອົງນີ້ທີ່ຖືກຮັບຂຶ້ນໄປທີ່ຟ້າສະຫວັນ,
ຈະສະເດັດກັບຄືນມາໃນລັກສະນະດຽວກັບທີ່ພວກທ່ານໄດ້ເຫັນພຣະອົງສະເດັດໄປທີ່ສະຫວັນ."
12ພວກສາວົກກໍໄດ້ອອກຈາກພູເຂົາຫມາກກອກເທດກັບໄປທີ່ນະຄອນເຢຣູຊາເລັມ, ຊຶ່ງໄກປະມານໜຶ່ງຮ້ອຍກິໂລແມັດ.13ເມື່ອພວກເພິ່ນມາຮອດ,
ພວກເພິ່ນໄດ້ຂຶ້ນໄປຫ້ອງຊັ້ນເທິງ, ທີ່ພວກເພິ່ນເຄີຍພັກອາໃສຢູ່. ພວກສາວົກລວມມີເປໂຕ, ໂຢຮັນ, ຢາໂກໂບ, ອັນເດອາ, ຟີລິບ, ໂທມາ,
ບາຣະໂທໂລມາຍ, ມັດທາຍ, ຢາໂກໂບ ລູກຊາຍຂອງອາລະຟາຍ, ຊີໂມນ ພວກຄົນຫົວຮຸນແຮງ, ແລະ ຢູດາ ລູກຊາຍຂອງຢາໂກໂບ.
14ພວກເຂົາທຸກຄົນເປັນນ້ຳໜຶ່ງໃຈດຽວກັນ, ໃນຂະນະທີ່ພວກສາວົກຍັງອະທິຖານຢ່າງຮ້ອນຮົນ. ລວມທັງພວກຜູ້ຍິງ,
ມາຣີແມ່ຂອງພຣະເຢຊູຄຣິດເຈົ້າ, ແລະ ບັນດານ້ອງຊາຍຂອງພຣະອົງ.
15ໃນເວລານັ້ນເປໂຕໄດ້ຢືນຂຶ້ນທ່າມກາງພວກພີ່ນ້ອງ, ປະມານ 120 ຄົນ, ແລະກ່າວວ່າ,16"ອ້າຍເອື້ອຍນ້ອງທັງຫລາຍ,
ຈຳເປັນຈະຕ້ອງສຳເລັດຕາມພຣະຄຳພີ, ທີ່ພຣະວິນ ຍານບໍຣິສຸດເຈົ້າໄດ້ກ່າວໄວ້ ໂດຍຜ່ານທາງກະສັດດາວິດກ່ຽວກັບຢູດາ,
ທີ່ນຳທາງໃຫ້ກັບພວກຄົນທີ່ມາຈັບພຣະເຢຊູຄຣິດເຈົ້າ.
17ເພາະວ່າລາວເປັນຄົນໜຶ່ງໃນພວກເຮົາ ແລະ
ມີສ່ວນຮ່ວມໃນພັນທະກິດນີ້ເຊັ່ນກັນ."18(ຕອນນີ້ຊາຍຄົນນີ້ໄດ້ເອົາຄ່າຕອບແທນໄປຊື້ທົ່ງນາຕອນໜຶ່ງ
ທີ່ລາວໄດ້ຮັບຍ້ອນຄວາມຊົ່ວຮ້າຍຂອງລາວ, ແລະ ຢູ່ບ່ອນນັ້ນລາວໄດ້ລົ້ມຫົວຟາດລົງ, ແລະ ຮ່າງກາຍຂອງລາວແຕກ, ແລະ
ລຳໄສ້ກໍໂລ່ອອກມາທັງໝົດ.19ທຸກຄົນທີ່ຢູ່ໃນນະຄອນ ເຢຣູຊາເລັມໄດ້ຍິນເລື່ອງນີ້, ພວກເຂົາຈຶ່ງເອີ້ນພື້ນດິນນັ້ນຕາມພາສາຂອງພວກເຂົາວ່າ
"ອະເກັນດາມາ," ນັ້ນຄື "ທົ່ງນາເລືອດ.")
20ເພາະວ່າມີຂຽນໄວ້ໃນພຣະທຳ ເພງສັນລະເສີນວ່າ, 'ຂໍໃຫ້ທີ່ຢູ່ຂອງລາວຫວ່າງເປົ່າ, ແລະ ຢ່າໃຫ້ມີໃຜອາໄສຢູ່ບ່ອນນັ້ນ';
'ຂໍໃຫ້ອີກຄົນໜຶ່ງມາຍຶດຕຳແໜ່ງການເປັນຜູ້ນຳຂອງລາວ.'
21ເພາະສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຄົນໜຶ່ງ ໃນບັນດາຄົນທີ່ຢູ່ຮ່ວມກັບພວກເຮົາຕະຫລອດເວລາທີ່ອົງພຣະເຢຊູຄຣິດເຈົ້າໄດ້ສະເດັດເຂົ້າມາ
ແລະ ອອກໄປໃນທ່າມກາງພວກເຮົາ,22ເລີ່ມຕັ້ງແຕ່ການບັບຕິສະມາຂອງໂຢຮັນຈົນຮອດມື້ທີ່ພຣະອົງຖືກຮັບຂຶ້ນໄປຈາກພວກເຮົາ,
ເຊິ່ງຕ້ອງເປັນພະຍານຮ່ວມກັບພວກເຮົາໃນການຄືນພຣະຊົນຂອງພຣະອົງ.”23ພວກເຂົາຈຶ່ງສະເໜີຊື່ຊາຍສອງຄົນຄື, ໂຢເຊັບ ທີ່ເອີ້ນວ່າ
ບາຣະຊາບາ, ຜູ້ທີ່ມີຊື່ເອີ້ນອີກວ່າ ຢູສະໂຕ, ແລະ ມັດເທຍ.
24ພວກເຂົາຈຶ່ງອະທິຖານ ແລະ ກ່າວວ່າ, "ອົງພຣະຜູ້ເປັນເຈົ້າ, ພຣະອົງຊົງຮູ້ຈິດໃຈຂອງມະນຸດທຸກຄົນ,
ຂໍພຣະອົງຊົງໂຜດເປີດເຜີຍວ່າຄົນໃດໃນສອງຄົນນີ້ທີ່ພຣະອົງຊົງເລືອກ.25ໃຫ້ຮັບໜ້າທີ່ໃນວຽກງານຮັບໃຊ້ນີ້ ແລະ
ເປັນອັກຄະສາວົກແທນຢູດາທີ່ໄດ້ຫລົງຜິດໄປຢູ່ໃນບ່ອນຂອງລາວແລ້ວ."26ພວກເຂົາຈົກສະຫລາກ, ແລະ ສະຫລາກນັ້ນກໍຕົກໃສ່ ມັດເທຍ,
ແລ້ວລາວໄດ້ຖືກນັບເຂົ້າຢູ່ໃນກຸ່ມອັກຄະສາວົກສິບເອັດຄົນນັ້ນ.


generated on Tue Jun 17 19:01:42 2025

# 2

1ເມື່ອວັນເພັນເຕຄໍສະເຕໄດ້ມາເຖິງ, ພວກສາວົກເຕົ້າໂຮມກັນຢູ່ໃນບ່ອນດຽວກັນ.2ໃນທັນໃດນັ້ນ
ມີສຽງຈາກຟ້າສະຫວັນຄ້າຍຄືສຽງພາຍຸແຮງກ້າ, ດັ່ງກ້ອງໄປທົ່ວເຮືອນທີ່ພວກເພິ່ນກຳລັງນັ່ງຢູ່.3ພວກເພິ່ນໄດ້ເຫັນໄຟລັກສະນະຄືກັບລີ້ນ,
ແຜ່ກະຈາຍຢູ່ເທິງພວກທ່ານແຕ່ລະຄົນ.4ພວກເພິ່ນທຸກຄົນກໍເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ ເລີ່ມເວົ້າພາສາອື່ນໆ,
ຕາມທີ່ພຣະວິນຍານບໍຣິສຸດເຈົ້າຊົງໃຫ້ພວກທ່ານເວົ້າ.

5ຊາວຢິວທີ່ອາໄສຢູ່ນະຄອນ ເຢຣູຊາເລັມ, ຄົນທີ່ຢຳເກງພຣະເຈົ້າ, ທີ່ມາຈາກທຸກປະເທດທົ່ວໃຕ້ຟ້າ.6ເມື່ອໄດ້ຍິນສຽງນີ້,
ຄົນຫລວງຫລາຍຈຶ່ງພາກັນມາ ແລະ ຮູ້ສຶກສັບສົນເພາະວ່າທຸກຄົນຕ່າງໆໄດ້ຍິນພວກເພິ່ນເວົ້າພາສາທ້ອງຖິ່ນຂອງຕົນເອງ.7ພວກເພິ່ນອັດສະຈັນໃຈ
ແລະ ປະຫລາດໃຈ, ຈຶ່ງເວົ້າວ່າ, "ເປັນຄວາມຈິງບໍ, ຄົນທີ່ກຳລັງເວົ້າບໍ່ໄດ້ແມ່ນຊາວຄາລີເລກັນທຸກຄົນ?
8ເປັນຫຍັງພວກເຮົາຈຶ່ງໄດ້ຍິນພວກທ່ານ, ແຕ່ລະຄົນເວົ້າພາສາທ້ອງຖິ່ນຂອງພວກເຮົາ?9ເຊິ່ງແມ່ນຊາວປາເທຍ, ຊາວເມເດຍ, ແລະຊາວເອລາມ,
ແລະຄົນທີ່ອາໄສຢູ່ໃນເຂດແດນ ເມໂຊໂປຕາເມຍ, ໃນແຂວງຢູດາຍ, ແລະແຂວງກາປາໂດເກຍ, ໃນແຂວງປົນໂຕ, ແລະ ແຂວງເອເຊຍ,
10ໃນແຂວງ ຟີເຄຍ ແລະ ແຂວງປຳຟີເລຍ, ໃນປະເທດເອຢິບແລະບາງສ່ວນຂອງເມືອງລີເບຍ ເຊິ່ງຂຶ້ນກັບເມືອງກີລີເນ,
ແລະຄົນທີ່ມາຢາມຈາກນະຄອນໂຣມ.11ຊາວຢິວແລະພວກຄົນທີ່ເຂົ້າລັດທິຊາວຢິວ, ຊາວກະເຣເຕ ແລະ ຊາວອາຣາເບຍ,
ພວກເຮົາຕ່າງໆກໍໄດ້ຍິນພວກທ່ານເວົ້າ ກ່ຽວກັບວຽກງານຮັບໃຊ້ອັນຍິ່ງໃຫຍ່ ຂອງພຣະເຈົ້າເປັນພາທ້ອງຖິ່ນຂອງເຮົາເອງ.
12ພວກເພິ່ນຈຶ່ງປະຫລາດໃຈ ແລະ ສົງໄສ; ແລະເວົ້າກັນວ່າ, “ນີ້ໝາຍຄວາມວ່າແນວໃດ?”13ແຕ່ບາງຄົນເວົ້າເຍາະເຍີ້ຍວ່າ,
“ພວກເຂົາເມົາເຫລົ້າແວງໃໝ່.“
14ແຕ່ເປໂຕຢືນຂຶ້ນພ້ອມກັບອັກຄະສາວົກສິບເອັດຄົນ, ແລ້ວກ່າວຕອບພວກເຂົາດ້ວຍສຽງດັງວ່າ, "ທ່ານຊາວຢູດາຍ ແລະ
ທ່ານທຸກຄົນທີ່ອາໄສຢູ່ນະຄອນ ເຢຣູຊາເລັມ, ຂໍທ່ານຈົ່ງຮູ້ເລື່ອງນີ້; ຕັ້ງໃຈຟັງຖ້ອຍຄຳຂອງຂ້າພະເຈົ້າ.
15ເພາະວ່າຄົນເຫລົ່ານີ້ບໍ່ໄດ້ເມົາດັ່ງທີ່ທ່ານຄິດ, ເພາະວ່າຕອນນີ້ເປັນເວລາເກົ້າໂມງເຊົ້າເທົ່ານັ້ນ.
16ແຕ່ເຫດການນີ້ເກີດຂຶ້ນຕາມຄຳທີ່ ໂຢເອນ ຜູ້ທຳນວາຍໄດ້ກ່າວໄວ້ວ່າ:17'ພຣະເຈົ້າກ່າວວ່າ,'ໃນຍຸກສຸດທ້າຍ,'
ເຮົາຈະຖອກເທພຣະວິນຍານຂອງເຮົາລົງໃສ່ມະນຸດທຸກຄົນ. ລູກຊາຍ ແລະ ລູກຍິງຂອງພວກທ່ານຈະທຳນວາຍ,
ຄົນໜຸ່ມຂອງພວກທ່ານຈະເຫັນນິມິດ, ແລະ ຄົນເຖົ້າແກ່ຈະຝັນເຫັນ.
18ທັງຜູ້ຮັບໃຊ້ຊາຍຍິງຂອງເຮົາດ້ວຍ ໃນມື້ນັ້ນເຮົາຈະຖອກເທວິນຍານຂອງເຮົາລົງມາ, ແລະພວກເພິ່ນຈະທຳນວາຍ.
19ເຮົາຈະສະແດງການອັດສະຈັນເທິງຟ້າສະຫວັນ ແລະ ໝາຍສຳຄັນເທິງແຜ່ນດິນເບື້ອງລຸ່ມນີ້ເປັນ, ເລືອດ, ໄຟ, ແລະໝອກຄວັນ.
20ດວງຕາເວັນຈະມືດໄປ ແລະ ດວງຈັນຈະເປັນເລືອດ, ກ່ອນມື້ອັນຍິ່ງໃຫຍ່ ແລະ ຮຸ່ງເຮືອງຂອງອົງພຣະຜູ້ເປັນເຈົ້າຈະມາເຖິງ.
21ແລ້ວກໍຈະເປັນເຊັ່ນນີ້ ຄືທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າຈະລອດພົ້ນ.'
22ທ່ານຊົນຊາດອິດສະຣາເອນ, ຈົ່ງຟັງຖ້ອຍຄຳຕໍ່ໄປນີ້: ພຣະເຢຊູຄຣິດເຈົ້າແຫ່ງນາຊາເຣັດ, ຜູ້ທີ່ພຣະເຈົ້າຊົງສະແດງຢ່າງຈະແຈ້ງແກ່ພວກທ່ານ
ໂດຍອິດທິຣິດ, ແລະການອັດສະຈັນ, ແລະໝາຍສຳຄັນຕ່າງໆ ທີ່ພຣະເຈົ້າຊົງເຮັດໂດຍຜ່ານພຣະອົງທ່າມກາງພວກທ່ານ,
ດັ່ງທີ່ພວກທ່ານເອງກໍຮູ້ຢູ່ແລ້ວ.23ພຣະອົງຖືກມອບໄວ້ເພາະເປັນແຜນການທີ່ພຣະເຈົ້າໄດ້ຊົງກຳນົດໄວ້ ແລະ ຊົງຮູ້ລ່ວງໜ້າ, ແລະ ພວກທ່ານ,
ໄດ້ຄຶງພຣະອົງໄວ້ທີ່ໄມ້ກາງແຂນ ແລະ ຂ້າພຣະອົງໂດຍມືຂອງຄົນອະທຳ.24ແຕ່ພຣະເຈົ້າໄດ້ເຮັດໃຫ້ພຣະອົງຄືນພຣະຊົນ,
ແລະເຮັດໃຫ້ພຣະອົງພົ້ນຈາກຄວາມເຈັບປວດແຫ່ງຄວາມຕາຍ, ເພາະເປັນໄປບໍ່ໄດ້ທີ່ຄວາມຕາຍຈະຍຶດພຣະອົງໄວ້.
25ເພາະດາວິດກ່າວເຖິງພຣະອົງວ່າ, 'ຂ້າພະເຈົ້າເຫັນອົງພຣະຜູ້ເປັນເຈົ້າຢູ່ຕໍ່ໜ້າຂ້າພະເຈົ້າຢູ່ສະເໝີ,
ເພາະວ່າພຣະອົງຢູ່ເບື້ອງຂວາຂອງຂ້າພະເຈົ້າ ເພື່ອວ່າຂ້າພະເຈົ້າຈະບໍ່ຫວັ່ນໄຫວ.26ເພາະເຫດນີ້ ຈິດໃຈຂອງຂ້າພະເຈົ້າຈຶ່ງຊື່ນຊົມຍິນດີ ແລະ
ລີ້ນຂອງຂ້າພະເຈົ້າຊື່ນຊົມຍິນດີ. ເຊັ່ນດຽວກັບ ຮ່າງກາຍຂອງຂ້າພະເຈົ້າຈະມີຊີວິດຢູ່ໃນຄວາມໝັ້ນໃຈ.
27ເພາະວ່າພຣະອົງຈະບໍ່ຊົງປະຖິ້ມຂ້ານ້ອຍໄວ້ໃນແດນແຫ່ງມໍຣະນາ, ທັງຈະບໍ່ປ່ອຍໃຫ້ຄົນບໍຣິສຸດເນົ່າເປື່ອຍໄປໃນຂຸມຝັງສົບ.
28ພຣະອົງໄດ້ຊົງໂຜດໃຫ້ຂ້າພະອົງເຫັນຫົນທາງແຫ່ງຊີວິດ; ພຣະອົງຈະເຮັດໃຫ້ຂ້ານ້ອຍເຕັມລົ້ນໄປດ້ວຍຄວາມຍິນດີຕໍ່ໜ້າພຣະອົງ.'
29ພີ່ນ້ອງທັງຫລາຍ, ຂ້າພະເຈົ້າມີໃຈກ້າຫານທີ່ຈະກ່າວກັບພວກທ່ານເຖິງ ດາວິດ: ຜູ້ເປັນບັນພະບູລຸດຂອງຂ້າພະເຈົ້າ ທ່ານຕາຍແລ້ວ
ແລະຖືກຝັງໄວ້, ແລະອຸບໂມງຝັງສົບຂອງທ່ານກໍຍັງຢູ່ກັບຂ້າພະເຈົ້າຈົນເຖິງທຸກມື້ນີ້.30ດ້ວຍເຫດນີ້,
ທ່ານຈຶ່ງເປັນຜູ້ທຳນວາຍທີ່ຮູ້ວ່າພຣະເຈົ້າໄດ້ຊົງສາບານ ດ້ວຍຄຳປະຕິຍານກັບທ່ານວ່າ,
ພຣະອົງຈະຊົງຕັ້ງຜູ້ໜຶ່ງຈາກເຊື້ອສາຍຂອງທ່ານໃຫ້ນັ່ງຢູ່ເທິງບັນລັງຂອງທ່ານ.31ທ່ານໄດ້ຮູ້ເຫດການນີ້ລ່ວງໜ້າ ແລະ
ກ່າວເຖິງການຄືນຊີວິດຂອງພຣະຄຣິດເຈົ້າວ່າ, 'ພຣະອົງຈະບໍ່ຖືກປະຖິ້ມໄວ້ໃນແດນມໍຣະນາ,
ແລະຈະບໍ່ເຮັດໃຫ້ພຣະກາຍຂອງພຣະອົງເນົ່າເປື່ອຍໄປ.'
32ພຣະເຢຊູຄຣິດເຈົ້າອົງນີ້—ທີ່ພຣະເຈົ້າຊົງເຮັດໃຫ້ຄືນພຣະຊົນແລ້ວ, ເຊິ່ງພວກເຮົາທຸກຄົນໄດ້ເປັນພະຍານໃນເລື່ອງນີ້.33ເພາະເຫດນີ້
ພຣະເຈົ້າຈຶ່ງໄດ້ຊົງຍົກຊູພຣະອົງໃຫ້ຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ.
ແລະໄດ້ຮັບພຣະວິນຍານບໍຣິສຸດເຈົ້າຈາກພຣະບິດາເຈົ້າຕາມພຣະສັນຍາແລ້ວ, ພຣະອົງຈຶ່ງຖອກເທລົງມາ,
ດັ່ງທີ່ພວກທ່ານໄດ້ເຫັນແລະໄດ້ຍິນແລ້ວ.
34ເພາະດາວິດບໍ່ໄດ້ຖືກຮັບຂຶ້ນໄປທີ່ສະຫວັນ, ແຕ່ທ່ານກ່າວວ່າ, "ພຣະເຈົ້າກ່າວກັບອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າວ່າ,
“ຈົ່ງນັ່ງຢູ່ຂ້າງຂວາມືຂອງຂ້າພະເຈົ້າ,35ຈົນກວ່າເຮົາຈະເຮັດໃຫ້ສັດຕູຂອງທ່ານເປັນບ່ອນຮອງຕີນຂອງທ່ານ."'36ເພາະສະນັ້ນ,
ຂໍໃຫ້ເຊື້ອສາຍອິດສະຣາເອນທັງຫມົດຮູ້ຢ່າງແຈ່ມແຈ້ງວ່າ ພຣະເຈົ້າໄດ້ເຮັດໃຫ້ພຣະເຢຊູຄຣິດເຈົ້າອົງນີ້ ທີ່ພວກທ່ານຄຶງໄວ້ທີ່ໄມ້ກາງແຂນ,
ຜູ້ຊຶ່ງເປັນທັງອົງພຣະຜູ້ເປັນເຈົ້າ ແລະ ພຣະຄຣິດເຈົ້າ.
37ເມື່ອພວກເພິ່ນໄດ້ຍິນເລື່ອງນີ້, ພວກເພິ່ນກໍຮູ້ສຶກກິນແໜງໃຈ, ຈຶ່ງກ່າວກັບເປໂຕ ແລະ ອັກຄະສາວົກຄົນອື່ນໆວ່າ, “ພີ່ນ້ອງເອີຍ,
ພວກເຮົາຄວນເຮັດແນວໃດ?“38ແລ້ວເປໂຕໄດ້ກ່າວກັບພວກເພິ່ນວ່າ, “ຈົ່ງກັບໃຈໃໝ່ ແລະ

ຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດເຈົ້າໃຫ້ໝົດທຸກຄົນ, ເພື່ອບາບທັງຫລາຍຂອງທ່ານຈະໄດ້ຮັບການອະໄພ, ແລະ
ພວກທ່ານຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດເຈົ້າ.[39]ເພາະວ່າພຣະສັນຍາທີ່ມີຕໍ່ທ່ານ ແລະເຊື້ອສາຍຂອງທ່ານ ແລະ
ກັບຄົນທັງປວງທີ່ຢູ່ຫ່າງໄກ, ແລະ ຄົນຫລວງຫລາຍຕາມທີ່ອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າຊົງເອີ້ນ."
[40]ທ່ານໄດ້ກ່າວຖ້ອຍຄຳອີກຫລາຍຢ່າງເພື່ອເປັນພະຍານ ແລະເຕືອນສະຕິ, ທ່ານກ່າວວ່າ,
"ຈົ່ງເອົາໂຕພົ້ນຈາກເຊື້ອຊາດຊົ່ວຮ້າຍນີ້ເຖີດ."[41]ແລ້ວພວກເຂົາຍອມຮັບຖ້ອຍຄຳຂອງເປໂຕ ແລະ ຮັບບັບຕິສະມາແລ້ວ,
ພວກເພິ່ນກໍໄດ້ກາຍມາເປັນສາວົກ ໃນມື້ນັ້ນມີປະມານສາມພັນຄົນ.[42]ພວກເພິ່ນຍັງຟັງຄຳສອນຂອງອັກຄະສາວົກຕໍ່ໄປ' ແລະ ຮ່ວມສາມັກຄີທຳ,
ໃນການຫັກເຂົ້າຈີ່ ແລະ ໃນການອະທິຖານ.
[43]ທຸກຄົນເກີດມີຄວາມຢ້ານກົວ, ພວກອັກຄະສາວົກໄດ້ເຮັດການອັດສະຈັນ ແລະ ໝາຍສຳຄັນຫລວງຫລາຍ.[44]ຜູ້ທີ່ເຊື່ອທຸກຄົນມາເຕົ້າໂຮມກັນ
ແລະ ເອົາສິ່ງຕ່າງໆມາລວມເປັນຂອງກາງ,[45]ແລະພວກເຂົາຂາຍທີ່ດິນ ແລະ ຊັບສິນ, ແລະແຈກຢາຍໃຫ້ແກ່ກັນຕາມຄວາມຈຳເປັນ.
[46]ທຸກໆມື້ພວກເຂົາຮ່ວມຕົວເປັນນ້ຳໜຶ່ງໃຈດຽວກັນໃນພຣະວິຫານ, ແລະກໍຫັກເຂົ້າຈີ່ຕາມເຮືອນ,
ຮັບປະທານອາຫານຮ່ວມກັນດ້ວຍຄວາມຍິນດີ ແລະ ດ້ວຍຄວາມຖ່ອມໃຈ;[47]ພວກສາວົກສັນລະເສີນພຣະເຈົ້າ ແລະ
ໄດ້ຮັບຄວາມຮັກແພງຈາກທຸກຄົນ. ອົງພຣະຜູ້ເປັນເຈົ້າຊົງເພີ່ມຈຳນວນຄົນ ທີ່ກຳລັງຈະລອດພົ້ນເຂົ້າມາທຸກໆມື້.


generated on Tue Jun 17 19:01:42 2025

# 3

[1]ໃນຂະນະທີ່ເປໂຕກັບໂຢຮັນກຳລັງຂຶ້ນໄປທີ່ພຣະວິຫານໃນເວລາອະທິຖານ, ຕອນບ່າຍສາມໂມງ,[2]ມີຊາຍຄົນໜຶ່ງເປັນເປ້ຍມາຕັ້ງແຕ່ເກີດ
ທຸກໆມື້ລາວຈະຖືກຫາມມາວາງໄວ້ທີ່ປະຕູພຣະວິຫານ, ທີ່ມີຊື່ວ່າປະຕູງາມ ເພື່ອໃຫ້ເຂົາຂໍທານຈາກຄົນທີ່ເຂົ້າໄປມາພຣະວິຫານ.
[3]ເມື່ອລາວເຫັນເປໂຕກຳລັງຈະເຂົ້າໄປໃນພຣະວິຫານ, ລາວກໍຂໍທານນຳ.

[4]ແຕ່ເປໂຕ, ກັບໂຢຮັນ ໄດ້ແນມເບິ່ງໜ້າລາວ, ແລະກ່າວວ່າ, "ຈົ່ງເບິ່ງຂ້າພະເຈົ້າເຖີດ."[5]ຄົນເປ້ຍຄົນນັ້ນກໍແນມເບິ່ງທີ່ພວກເພິ່ນ,
ດ້ວຍຄວາມຄາດຫວັງວ່າຈະໄດ້ຮັບບາງຢ່າງຈາກພວກເພິ່ນ.[6]ແຕ່ເປໂຕໄດ້ກ່າວວ່າ, "ເງິນ ແລະ ຄຳ ເຮົາບໍ່ມີ,
ສິ່ງທີ່ເຮົາມີຢູ່ນັ້ນເຮົາຈະໃຫ້ແກ່ເຈົ້າ. ຄືໃນພຣະນາມພຣະເຢຊູຄຣິດເຈົ້າແຫ່ງນາຊາເຣັດ, ຈົ່ງລູກຍ່າງເຖີດ."
[7]ແລ້ວເປໂຕຈັບມືຂວາຂອງລາວ, ຈູງຂຶ້ນມາ, ໃນທັນໃດນັ້ນຕີນ ແລະ ຂໍ້ຕີນຂອງລາວກໍແຂງແຮງຂຶ້ນ.[8]ຄົນເປ້ຍຄົນນັ້ນກໍໄດ້ຢືນຂຶ້ນ ແລະ
ເລີ່ມຕົ້ນຍ່າງ, ລາວຍ່າງເຂົ້າໄປໃນພຣະວິຫານພ້ອມກັບເປໂຕ ແລະ ໂຢຮັນ, ທັງຍ່າງ, ທັງກະໂດດໂລດເຕັ້ນ, ແລະສັນລະເສີນພຣະເຈົ້າ.
[9]ຄົນທັງປວງເຫັນລາວຍ່າງ ແລະ ສັນລະເສີນພຣະເຈົ້າ.[10]ພວກເຂົາກໍຈື່ໄດ້ວ່າລາວເປັນຄົນນັ່ງຂໍທານຢູ່ທີ່ປະຕູງາມຂອງພຣະວິຫານ;
ແລະພວກເຂົາກໍເຕັມໄປດ້ວຍຄວາມອັດສະຈັນ ແລະປະຫລາດໃຈ ເພາະເຫດການທີ່ເກີດຂຶ້ນກັບຄົນນັ້ນ.
[11]ໃນຂະນະ ທີ່ຊາຍຄົນນັ້ນຍັງຢູ່ກັບເປໂຕ ແລະ ໂຢຮັນ, ຄົນທັງປວງໄດ້ແລ່ນເຂົ້າມາຫາພວກເພິ່ນທີ່ລະບຽງພຣະວິຫານ
ເຊິ່ງເອີ້ນວ່າລະບຽງຂອງໂຊໂລໂມນ, ດ້ວຍຄວາມແປກໃຈຫລາຍ.[12]ເມື່ອເປໂຕເຫັນເຊັ່ນນີ້, ທ່ານຈຶ່ງກ່າວກັບຄົນເຫລົ່ານັ້ນວ່າ,
"ທ່ານຊົນຊາດອິດສະຣາເອນ, ເປັນຫຍັງພວກທ່ານຈຶ່ງແປກໃຈ? ເປັນຫຍັງພວກທ່ານຈຶ່ງເບິ່ງຂ້າພະເຈົ້າ,
ຄືກັບວ່າຂ້າພະເຈົ້າໄດ້ເຮັດໃຫ້ຊາຍຄົນນີ້ຍ່າງໂດຍຣິດອຳນາດ ແລະ ຄວາມດີຂອງຂ້າພະເຈົ້າເອງ?
[13]ພຣະເຈົ້າຂອງອັບຣາຮາມ, ອີຊາກ, ແລະ ຢາໂຄບ, ເຊິ່ງເປັນພຣະເຈົ້າຂອງບັນພະບຸລຸດຂອງພວກເຮົາ,
ໄດ້ມອບກຽດຕິຍົດນີ້ໃຫ້ແກ່ພຣະເຢຊູຄຣິດເຈົ້າ, ຜູ້ຮັບໃຊ້ຂອງພຣະອົງ ພຣະອົງຊຶ່ງເປັນຜູ້ທີ່ພວກທ່ານໄດ້ມອບໄວ້ ແລະ ປະຕິເສດຕໍ່ຫນ້າປີລາດ,
ເມື່ອລາວຕັດສິນທີ່ຈະປ່ອຍພຣະອົງ.[14]ທ່ານໄດ້ປະຕິເສດອົງບໍຣິສຸດ ແລະ ຊອບທຳ, ແລະ ທ່ານໄດ້ຂໍໃຫ້ປ່ອຍຕົວຄາດຕະກອນໃຫ້ແກ່ທ່ານແທນ.
[15]ທ່ານໄດ້ຂ້າພຣະອົງຜູ້ຊຶ່ງເປັນເຈົ້າແຫ່ງຊີວິດ, ຜູ້ທີ່ພຣະເຈົ້າໄດ້ປຸກໃຫ້ຟື້ນຄືນມາຈາກຄວາມຕາຍ—ແລະຂ້າພະເຈົ້າໄດ້ເປັນພະຍານໃນເລື່ອງນີ້.
[16]ບັດນີ້, ໂດຍຄວາມເຊື່ອໃນພຣະນາມຂອງພຣະອົງ—ຊາຍຄົນນີ້ທີ່ທ່ານໄດ້ເຫັນແລະຮູ້ຈັກ—
ພຣະນາມດຽວກັນນີ້ໄດ້ສ້າງໃຫ້ລາວມີຄວາມເຂັ້ມແຂງຂຶ້ນ. ໂດຍຄວາມເຊື່ອທາງພຣະເຢຊູຄຣິດເຈົ້າ
ເຮັດໃຫ້ລາວຫາຍດີເປັນປົກກະຕິຕາມທີ່ປະກົດຕໍ່ໜ້າພວກທ່ານທຸກຄົນ.
[17]ພີ່ນ້ອງທັງຫລາຍ, ບັດນີ້, ຂ້າພະເຈົ້າຮູ້ວ່າພວກທ່ານໄດ້ເຮັດມັນລົງໄປໂດຍຮູ້ເທົ່າບໍ່ເຖິງການ, ເຊັ່ນດຽວກັບບັນດາຜູ້ນຳຂອງພວກທ່ານ.
[18]ແຕ່ສິ່ງເຫລົ່ານີ້ ພຣະເຈົ້າໄດ້ບອກໄວ້ລ່ວງໜ້າແລ້ວໂດຍປາກຂອງຜູ້ທຳນວາຍທຸກຄົນ, ວ່າພຣະຄຣິດຂອງພຣະອົງຈະຕ້ອງທົນທຸກທໍລະມານ,
ເຊິ່ງພຣະອົງເອງໄດ້ຊົງເຮັດສຳເລັດແລ້ວ.
[19]ເພາະເຫດນີ້, ຈົ່ງກັບໃຈເສຍໃໝ່, ແລະ ຫັນກັບມາ, ເພື່ອຄວາມບາບຂອງທ່ານຈະຖືກລົບລ້າງອອກໄປ,
ເພື່ອວາລະແຫ່ງການຟື້ນຟູໃໝ່ຈາກການປະກົດຂອງພຣະຜູ້ເປັນເຈົ້າ;[20]ແລະພຣະອົງຈະມອບໃຫ້ພຣະຄຣິດເຈົ້າ.
ຜູ້ຊຶ່ງແຕ່ງຕັ້ງໃຫ້ເປັນພຣະເຢຊູຄຣິດເຈົ້າໃຫ້ແກ່ທ່ານ,
[21]ພຣະອົງຈຳຕ້ອງຢູ່ໃນສະຫວັນຈົນກ່ວາຈະຮອດເວລາທີ່ທຸກສິ່ງຈະຖືກສ້າງຕັ້ງຂຶ້ນມາໃໝ່, ຕາມທີ່ພຣະເຈົ້າໄດ້ກ່າວໄວ້ເປັນເວລາດົນນານແລ້ວ
ໂດຍປາກຂອງບັນດາຜູ້ທຳນວາຍບໍຣິສຸດຂອງພຣະອົງ.[22]ໂມເຊກ່າວຄວາມຈິງວ່າ, 'ອົງພຣະຜູ້ເປັນເຈົ້າຈະແຕ່ງຕັ້ງຜູ້ທຳນວາຍ
ຄືກັບຂ້າພະເຈົ້າຂຶ້ນມາໃນທ່າມກາງພີ່ນ້ອງຂອງພວກທ່ານ. ພວກທ່ານຈະຟັງທຸກສິ່ງທີ່ພຣະອົງຈະກ່າວຕໍ່ພວກທ່ານ.[23]ສິ່ງທີ່ຈະເກີດຂຶ້ນກັບທຸກຄົນ
ທີ່ບໍ່ຟັງຜູ້ທຳນວາຍນັ້ນ ພວກເຂົາກໍຈະຖືກທຳລາຍໃຫ້ໝົດໄປຈາກຄົນທັງປວງ.'
[24]ແມ່ນແລ້ວ, ບັນດາຜູ້ທຳນວາຍຕັ້ງແຕ່ຊາມູເອນ, ແລະຄົນເຫລົ່ານັ້ນທີ່ມາພາຍຫລັງ, ພວກເຂົາກ່າວ ແລະ ປະກາດເຖິງມື້ເຫລົ່ານີ້.
[25]ພວກທ່ານເປັນເຊື້ອສາຍຂອງຜູ້ທຳນວາຍ ແລະຂອງພັນທະສັນຍາທີ່ພຣະເຈົ້າໄດ້ເຮັດໄວ້ກັບບັນພະບຸລຸດຂອງພວກທ່ານ,
ພຣະອົງກ່າວກັບອັບຣາຮາມວ່າ, 'ບັນດາເຊື້ອສາຍຂອງແຜ່ນດິນໂລກທັງໝົດຈະໄດ້ຮັບພຣະພອນ
ຍ້ອນເຊື້ອສາຍຂອງທ່ານ.'[26]ຫລັງຈາກທີ່ພຣະເຈົ້າໄດ້ເຮັດໃຫ້ຜູ້ຮັບໃຊ້ຂອງພຣະອົງເປັນຄືນມາແລ້ວ, ພຣະອົງໄດ້ສົ່ງທ່ານໄປຫາພວກທ່ານກ່ອນ,
ເພື່ອທີ່ຈະຊົງອວຍພອນແກ່ພວກທ່ານ ໂດຍການເຮັດໃຫ້ພວກທ່ານທຸກຄົນຫັນກັບຈາກຄວາມຊົ່ວຮ້າຍຂອງຕົນ."


generated on Tue Jun 17 19:01:42 2025

4 1ໃນຂະນະທີ່ ເປໂຕກັບໂຢຮັນ ກຳລັງເວົ້າກັບຄົນທັງປວງຢູ່ນັ້ນ, ບັນດາປະໂລຫິດ ແລະ ຫົວຫນ້າຮັກສາພຣະວິຫານ
ແລະພວກຊາດູກາຍກໍພາກັນມາຫາພວກເຂົາ.2ຄົນເຫລົ່ານັ້ນມີຄວາມກັງວົນໃຈຫລາຍ. ເພາະວ່າເປໂຕກັບໂຢຮັນ ກຳລັງສັ່ງສອນຄົນທັງຫລາຍ
ແລະ ປະກາດການຄືນພຣະຊົນຈາກຄວາມຕາຍຂອງພຣະເຢຊູຄຣິດເຈົ້າ.3ພວກເຂົາຈຶ່ງຈັບທ່ານທັງສອງໄປ ແລະ
ຂັງໄວ້ໃນຄຸກຈົນຮອດເຊົ້າມື້ຕໍ່ມາ, ເພາະວ່າໃນຕອນນັ້ນເປັນເວລາຄ່ຳແລ້ວ.4ແຕ່ຄົນຈຳນວນຫລາຍທີ່ໄດ້ຍິນຖ້ອຍຄຳນັ້ນກໍເຊື່ອ; ແລະ
ນັບຈຳນວນຜູ້ຊາຍທີ່ເຊື່ອໄດ້ປະມານຫ້າພັນຄົນ.

5ໃນເຊົ້າມື້ຕໍ່ມາ ບັນດາຜູ້ທີ່ປົກຄອງກັບຜູ້ອາວຸໂສ, ແລະ ພວກທຳມະຈານກໍໄດ້ມາປະຊຸມກັນທີ່ນະຄອນ ເຢຣູຊາເລັມ.
6ອັນນາມະຫາປະໂລຫິດໃຫຍ່, ກາຢະຟາ, ໂຢຮັນ, ແລະ ອະເລັກຊັນເດີ, ແລະທຸກຄົນທີ່ເປັນຍາດພີ່ນ້ອງຂອງມະຫາປະໂລຫິດກໍຢູ່ທີ່ນັ້ນ.
7ເມື່ອພວກເຂົາໃຫ້ເປໂຕກັບໂຢຮັນຢືນຢູ່ທ່າມກາງພວກເຂົາແລ້ວ, ພວກເຂົາຈຶ່ງຖາມທ່ານທັງສອງວ່າ, "ພວກທ່ານເຮັດການນີ້, ໂດຍຣິດອຳນາດ,
ຫລືໂດຍຊື່ຂອງໃຜ?"
8ແລ້ວເປໂຕ, ກໍເຕັມລົ້ນດ້ວຍພຣະວິນຍານບໍຣິສຸດເຈົ້າ, ກ່າວແກ່ພວກເຂົາວ່າ, “ທ່ານຜູ້ປົກຄອງປະຊາຊົນ, ແລະ ພວກຜູ້ອາວຸໂສທັງຫລາຍ,
9ຖ້າພວກທ່ານຈະຖາມຂ້າພະເຈົ້າເຖິງການດີທີ່ພວກເຮົາໄດ້ເຮັດເພື່ອຄົນເຈັບປ່ວຍ—ວ່າລາວດີຂຶ້ນເປັນປົກກະຕິໄດ້ແນວໃດ?10ກໍຂໍໃຫ້ພວກທ່ານ
ແລະ ຊົນຊາດອິດສະຣາເອນ, ທຸກຄົນຈົ່ງຮູ້ໄວ້ວ່າໃນພຣະນາມຂອງພຣະເຢຊູຄຣິດເຈົ້າແຫ່ງນາຊາເຣັດ, ຜູ້ທີ່ພວກທ່ານໄດ້ຖືກຄຶງທີ່ກາງແຂນ,
ຜູ້ທີ່ພຣະເຈົ້າໄດ້ຊົງເຮັດໃຫ້ພຣະອົງເປັນຂຶ້ນມາຈາກຄວາມຕາຍ—ໂດຍພຣະອົງນີ້ແຫລະ
ທີ່ເຮັດໃຫ້ຊາຍຄົນນີ້ຢືນຢູ່ຕໍ່ໜ້າທ່ານທັງຫລາຍເປັນປົກກະຕິ.
11ພຣະເຢຊູຄຣິດເຈົ້າຊົງເປັນສີລາທີ່ນາຍຊ່າງກໍ່ສ້າງໄດ້ປະຖິ້ມແຕ່ໄດ້ຖືກສ້າງໃຫ້ເປັນສີລາເສົາເອກແລ້ວ.12ບໍ່ມີຄວາມລອດພົ້ນໃນຜູ້ອື່ນເລີຍ,
ເພາະວ່າບໍ່ມີຊື່ອື່ນໃດທົ່ວໃຕ້ຟ້າທີ່ຊົງມອບທ່າມກາງມະນຸດທັງປວງ, ທີ່ສ້າງໃຫ້ພວກເຮົາໄດ້ຮັບຄວາມລອດພົ້ນໄດ້."
13ເມື່ອພວກເຂົາເຫັນຄວາມກ້າຫານຂອງເປໂຕກັບໂຢຮັນ, ພວກເຂົາຮູ້ວ່າທ່ານທັງສອງແມ່ນຄົນທຳມະດາ, ແລະບໍ່ມີການສຶກສາ,
ພວກເຂົາກໍແປກໃຈ, ແລະ ຈື່ໄດ້ວ່າເປໂຕກັບໂຢຮັນເຄີຍຢູ່ກັບພຣະເຢຊູຄຣິດເຈົ້າ.
14ເພາະວ່າພວກເຂົາເຫັນວ່າຊາຍຄົນນັ້ນທີ່ໄດ້ຮັບການປິ່ນປົວຢືນຢູ່ກັບທ່ານທັງສອງ, ພວກເຂົາກໍບໍ່ມີຫຍັງທີ່ຈະຕໍ່ຕ້ານໄດ້.
15ຫລັງຈາກນັ້ນ ພວກເຂົາກໍສັ່ງໃຫ້ພວກອັກຄະສາວົກອອກຈາກທີ່ປະຊຸມສະພານັ້ນ, ແລ້ວພວກເຂົາຈຶ່ງສົນທະນາກັນໃນພວກເຂົາເອງ.
16ພວກເຂົາກ່າວວ່າ, "ພວກເຮົາຈະເຮັດແນວໃດກັບຄົນເຫລົ່ານີ້? ເພາະວ່າຄວາມຈິງທີ່ພວກເຂົາໄດ້ເຮັດການອັດສະຈັນທີ່ຍິ່ງໃຫຍ່
ເຊິ່ງທຸກຄົນທີ່ອາໄສຢູ່ໃນນະຄອນ ເຢຣູຊາເລັມ; ກໍຮູ້ເລື່ອງນີ້ ເຊິ່ງພວກເຮົາກໍປະຕິເສດບໍ່ໄດ້.
17ແຕ່ເພື່ອບໍ່ໃຫ້ເລື່ອງນີ້ແຜ່ລາມອອກໄປທ່າມກາງປະຊາຊົນ,
ພວກເຮົາຈະເຕືອນພວກເຂົາຢ່າໃຫ້ເວົ້າອອກຊື່ນີ້ກັບໃຜອີກຕໍ່ໄປ."18ດັ່ງນັ້ນພວກເຂົາຈຶ່ງເອີ້ນເປໂຕກັບໂຢຮັນເຂົ້າມາ.
ແລະສັ່ງຢ້ຳກັບພວກທ່ານບໍ່ໃຫ້ເວົ້າ ຫລື ສອນກ່ຽວກັບພຣະນາມຂອງພຣະເຢຊູຄຣິດເຈົ້າອີກເລີຍ.
19ແຕ່ເປໂຕກັບໂຢຮັນກ່າວຕອບພວກເຂົາວ່າ, "ພວກທ່ານຈົ່ງພິຈາລະນາເບິ່ງ ຈະຟັງຄວາມພວກທ່ານ
ຫລືຟັງຄວາມຂອງພຣະເຈົ້າອັນໃດເປັນສິ່ງຖືກຕ້ອງຕໍ່ສາຍຕາພຣະເຈົ້າ?20ເພາະວ່າຂ້າພະເຈົ້າຈະບໍ່ເວົ້າເຖິງສິ່ງທີ່ຂ້າພະເຈົ້າໄດ້ເຫັນ ແລະ
ໄດ້ຍິນນັ້ນກໍບໍ່ໄດ້."
21ຫລັງຈາກທີ່ໄດ້ຢ້ຳເຕືອນເປໂຕກັບໂຢຮັນແລ້ວ, ພວກເຂົາປ່ອຍທ່ານທັງສອງໄປ. ພວກເຂົາຊອກຫາສາເຫດທີ່ຈະລົງໂທດທ່ານທັງສອງບໍ່ໄດ້,
ເພາະວ່າທຸກຄົນກຳລັງສັນລະເສີນພຣະເຈົ້າໃນເຫດການທີ່ເກີດຂຶ້ນ.
22ຊາຍຄົນນັ້ນທີ່ໄດ້ຮັບການຮັກສາຈາກພະຍາດໂດຍຣິດອຳນາດນັ້ນກໍມີອາຍຸຫລາຍກວ່າສີ່ສິບປີ.
23ຫລັງຈາກທີ່ໄດ້ຮັບການປ່ອຍຕົວແລ້ວ, ເປໂຕກັບໂຢຮັນຈຶ່ງໄປຫາພີ່ນ້ອງຂອງຕົນ ແລະໄດ້ເລົ່າເລື່ອງທັງໝົດທີ່ພວກຫົວໜ້າ ປະໂລຫິດ ແລະ
ຜູ້ອາວູໂສໄດ້ກ່າວຕໍ່ພວກເຂົາ.24ເມື່ອພວກເຂົາໄດ້ຍິນເລື່ອງນີ້, ກໍຮ່ວມໃຈກັນຮ້ອງສຽງດັງຫາພຣະເຈົ້າວ່າ, "ອົງພຣະຜູ້ເປັນເຈົ້າ,
ພຣະອົງໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ແລະ ທະເລ, ແລະ ສັບພະສິ່ງທີ່ມີຢູ່ໃນນັ້ນ.25ພຣະອົງຜູ້ທີ່ກ່າວໄວ້ໂດຍພຣະວິນຍານບໍຣິສຸດ
ແລະ ໂດຍປາກຂອງດາວິດ, ບັນພະບຸລຸດຂອງພວກເຮົາຜູ້ຮັບໃຊ້ຂອງພຣະອົງວ່າ, 'ເຫດໃດຄົນຕ່າງຊາດຈຶ່ງໂຫດຮ້າຍຢ່າງຮຸນແຮງ, ແລະ
ຄົນທັງຫລາຍຈຶ່ງກໍ່ອຸບາຍອັນໄຮ້ປະໂຫຍດ?'
26ບັນດາ, 'ກະສັດຂອງໂລກນີ້ໄດ້ຕັ້ງລວມໂຕກັນຂຶ້ນ, ແລະບັນດາຜູ້ປົກຄອງກໍລວມໂຕກັນຕໍ່ຕ້ານອົງພຣະຜູ້ເປັນເຈົ້າ,
ແລະຕໍ່ຕ້ານພຣະຄຣິດຂອງພຣະອົງ.'
27ໃນຄວາມເປັນຈິງ, ທັງເຮໂຣດແລະປົນທຽວປີລາດ, ກັບພວກຄົນຕ່າງຊາດ ແລະ ຊົນຊາດອິດສະຣາເອນ,
ໄດ້ເຕົ້າໂຮມກັນໃນເມືອງນີ້ຕໍ່ຕ້ານກັບພຣະເຢຊູຄຣິດເຈົ້າ, ຜູ້ຮັບໃຊ້ບໍຣິສຸດຂອງພຣະອົງທີ່ຊົງເຈີມໄວ້ແລ້ວ.
28ພວກເຂົາໄດ້ເຕົ້າໂຮມກັນເພື່ອທີ່ຈະເຮັດທຸກສິ່ງຕາມພຣະຫັດ ແລະ ພຣະປະສົງຂອງພຣະອົງທີ່ໄດ້ຕັດສິນພຣະໄທ
ຕໍ່ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ.
29ບັດນີ້, ອົງພຣະຜູ້ເປັນເຈົ້າ, ຂໍໂຜດຫລຽວເບິ່ງຄຳຂົ່ມຂູ່ຂອງພວກເຂົາ ແລະ
ຂໍໃຫ້ບັນດາຜູ້ຮັບໃຊ້ຂອງພຣະອົງທີ່ຈະກ່າວພຣະທັມຂອງພຣະອົງດ້ວຍໃຈກ້າຫານ.
30ເພື່ອວ່າໃນຂະນະທີ່ພຣະອົງຊົງເດ່ພຣະຫັດຂອງພຣະອົງອອກເພື່ອການຮັກສານັ້ນໝາຍສຳຄັນ,
ແລະການອັດສະຈັນຈະເກີດຂຶ້ນໂດຍພຣະນາມຂອງພຣະເຢຊູຄຣິດເຈົ້າ. ຜູ້ຮັບໃຊ້ທີ່ບໍຣິສຸດຂອງພຣະອົງ."31ເມື່ອພວກເຂົາອະທິຖານຈົບແລ້ວ,
ສະຖານທີ່ເຊິ່ງພວກເຂົາປະຊຸມຢູ່ນັ້ນກໍສັ່ນສະເທືອນ, ແລ້ວພວກເຂົາກໍເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ
ກ່າວພຣະທັມຂອງພຣະເຈົ້າດ້ວຍໃຈກ້າຫານ.
32ຄົນທີ່ເຊື່ອຈຳນວນຫລາຍກໍມີໃຈ ແລະ ຈິດວິນຍານດຽວກັນ. ບໍ່ມີໃຜອ້າງວ່າຊັບສົມບັດທີ່ພວກເຂົາມີເປັນຂອງຕົນເອງ,
ແຕ່ຊັບສົມບັດທັງຫມົດທີ່ພວກເຂົາມີແມ່ນຂອງສ່ວນກາງ.33ດ້ວຍຣິດອຳນາດອັນຍິ່ງໃຫຍ່

 generated on Tue Jun 17 19:01:42 2025

ບັນດາອັກຄະສາວົກກໍປະກາດຄຳພະຍານເຖິງການຄືນພຣະຊົນຂອງພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າ,
ແລະພຣະຄຸນອັນຍິ່ງໃຫຍ່ກໍຢູ່ກັບພວກເຂົາທຸກຄົນ.
[34]ໃນພວກເຂົາບໍ່ມີຜູ້ໃດຂາດເຂີນສິ່ງໃດໆ, ເພາະວ່າທຸກຄົນທີ່ເປັນເຈົ້າຂອງທີ່ດິນ ແລະ ເຮືອນກໍຂາຍມັນໄປ
ແລະນຳເງິນທີ່ໄດ້ຈາກການຂາຍສິ່ງເຫລົ່ານັ້ນ.[35]ວາງໄວ້ທີ່ 'ຕີນ, ຂອງພວກອັກຄະສາວົກແລະແຈກຢາຍໃຫ້ກັບຜູ້ທີ່ເຊື່ອ
ແຕ່ລະຄົນຕາມຄວາມຈຳເປັນ.
[36]ໂຢເຊັບເປັນ, ຄົນເລວີ, ທີ່ມາຈາກເກາະ ໄຊປຣັສ ເຊິ່ງບັນດາອັກຄະສາວົກຊື່ວ່າບາຣະນາບາ (ເຊິ່ງຫມາຍຄວາມວ່າ ລູກແຫ່ງການໜູນໃຈ),
[37]ມີທີ່ດິນແລ້ວຂາຍໄປ ແລະ ນຳເງິນນັ້ນມາວາງໄວ້ທີ່ 'ຕີນ. ຂອງພວກອັກຄະສາວົກ.


generated on Tue Jun 17 19:01:42 2025

5 1ມີຊາຍຄົນໜຶ່ງຊື່ວ່າອານາເນຍ, ກັບຊາຟີຣາເມຍຂອງລາວ, ໄດ້ຂາຍທີ່ດິນ,2ແລ້ວຮັກສາເງິນທີ່ຂາຍໄດ້ສ່ວນໜຶ່ງໄວ້
(ເມຍຂອງລາວກໍຮູ້ເລື່ອງນີ້ດ້ວຍ), ແລະໄດ້ນຳເອົາເງິນອີກສ່ວນໜຶ່ງມາວາງໄວ້ທີ່ຕີນ. ຂອງພວກອັກຄະສາວົກ.

3ເປໂຕກ່າວວ່າ, "ອານາເນຍ, ເປັນຫຍັງຊາຕານຈຶ່ງຄວບຄຸມຈິດໃຈຂອງທ່ານໃຫ້ຕົວະຕໍ່ພຣະວິນຍານບໍຣິສຸດເຈົ້າ
ແລະຮັກສາເງິນສ່ວນໜຶ່ງຂອງຄ່າດິນນັ້ນໄວ້?4ເມື່ອທີ່ດິນຍັງບໍ່ໄດ້ຖືກຂາຍນັ້ນ, ມັນກໍຍັງເປັນຂອງທ່ານບໍ່ແມ່ນຫລື,
ແລະຫລັງຈາກຂາຍມັນໄປແລ້ວ, ມັນກໍຍັງຢູ່ໃນອຳນາດຂອງທ່ານບໍ່ແມ່ນຫລື? ສິ່ງໃດທີ່ເຮັດໃຫ້ໃຈຂອງທ່ານຄິດເຮັດແບບນີ້?
ທ່ານບໍ່ໄດ້ຕົວະຕໍ່ມະນຸດ, ແຕ່ໄດ້ຕົວະຕໍ່ພຣະເຈົ້າ."5ເມື່ອອານາເນຍໄດ້ຍິນຖ້ອຍຄຳເຫລົ່ານີ້, ລາວກໍລົ້ມລົງ ແລະ ສິ້ນໃຈ,
ທຸກຄົນທີ່ໄດ້ຍິນເລື່ອງນີ້ກໍເກີດຄວາມຢ້ານກົວທີ່ສຸດ.6ພວກຄົນໜຸ່ມກໍເຂົ້າມາຫໍ່ສົບຂອງລາວ, ແລ້ວຫາມລາວອອກໄປຝັງ.
7ຫລັງຈາກນັ້ນປະມານສາມຊົ່ວໂມງ, ເມຍຂອງລາວເຊິ່ງບໍ່ຮູ້ກ່ຽວກັບເຫດການທີ່ເກີດຂຶ້ນ, ກໍເຂົ້າມາ.8ເປໂຕຈຶ່ງກ່າວກັບນາງວ່າ,
"ຈົ່ງບອກເຮົາເຖີດວ່າ ເຈົ້າຂາຍທີ່ດິນໄດ້ພຽງແຕ່ລາຄາເທົ່ານັ້ນບໍ?. "ນາງຕອບວ່າ "ແມ່ນແລ້ວ, ໄດ້ເທົ່ານັ້ນແຫລະ."
9ແລ້ວເປໂຕກ່າວກັບນາງວ່າ, "ພວກທ່ານເປັນຫຍັງຈຶ່ງໄດ້ພ້ອມໃຈກັນທົດລອງພຣະວິນຍານຂອງອົງພຣະຜູ້ເປັນເຈົ້າ? ເບິ່ງແມ,
ຕີນຂອງຜູ້ທີ່ຝັງສົບຜົວຂອງທ່ານຢູ່ທີ່ປະຕູ, ແລະພວກເຂົາຈະຫາມສົບຂອງທ່ານອອກໄປດ້ວຍ."10ທັນໃດນັ້ນ ນາງກໍລົ້ມລົງສິ້ນໃຈທີ່ຕີນຂອງເປໂຕ.
ເມື່ອພວກຄົນໜຸ່ມເຂົ້າມາ, ເຫັນວ່ານາງຕາຍແລ້ວ, ແລະພວກເຂົາກໍຫາມສົບຂອງນາງອອກໄປຝັງໄວ້ຢູ່ຂ້າງຜົວຂອງນາງ.11ທົ່ວທັງຄຣິສຕະຈັກ,
ແລະທຸກຄົນທີ່ໄດ້ຍິນເຫດການນັ້ນກໍເກີດຄວາມຢ້ານກົວຫລາຍ.
12ມີໝາຍສຳຄັນ ແລະ ການອັດສະຈັນຫລວງຫລາຍເກີດຂຶ້ນທ່າມກາງປະຊາຊົນຜ່ານມືຂອງພວກອັກຄະສາວົກ.
ພວກເຂົາຊຸມນຸມກັນຢູ່ທີ່ລະບຽງຂອງ ໂຊໂລໂມນ.13ແຕ່ບໍ່ມີໃຜກ້າທີ່ຈະເຂົ້າໄປຮ່ວມກັບພວກເຂົາ;
ແຕ່ພວກເຂົາກໍໄດ້ຮັບຄວາມເຄົາລົບນັບຖືຢ່າງສູງຈາກປະຊາຊົນ.
14ຜູ້ທີ່ເຊື່ອຍັງເຂົ້າມາເປັນສາວົກຂອງອົງພຣະຜູ້ເປັນເຈົ້າຫລາຍຂຶ້ນທັງຊາຍ ແລະ ຍິງ,15ຈົນພວກເຂົາເຖິງຂັ້ນຫາມຄົນເຈັບປ່ວຍໄປຕາມຫົນທາງ
ແລະວາງພວກເຂົາໄວ້ເທິງບ່ອນນອນ, ເພື່ອເວລາທີ່ເປໂຕໄດ້ຍ່າງຜ່ານໄປ, ເງົາຂອງທ່ານອາດຈະສ່ອງລົງມາໃສ່ພວກເຂົາບາງຄົນ.
16ມີປະຊາຊົນຈຳນວນຫລາຍມາຈາກເມືອງທີ່ຢູ່ອ້ອມຂ້າງນະຄອນ ເຢຣູຊາເລັມ, ກໍໄດ້ພາກັນມາ ແລະ
ນຳເອົາຄົນເຈັບປ່ວຍແລະຄົນທີ່ທົນທຸກທໍລະມານຈາກຜີຊົ່ວຮ້າຍມາດ້ວຍ, ແລະ ພວກເຂົາກໍໄດ້ຮັບການຮັກສາໃຫ້ຫາຍດີທຸກຄົນ.
17ມະຫາປະໂລຫິດໃຫຍ່ ແລະ ບັນດາຜູ້ທີ່ຢູ່ຝ່າຍເຂົາ (ທີ່ເປັນພວກຊາດູກາຍ) ກໍໄດ້ລຸກຂຶ້ນໄປ;
ພວກເຂົາເຕັມໄປດ້ວຍຄວາມອິດສາ18ຈຶ່ງໄດ້ຈັບພວກອັກຄະສາວົກ, ແລະຂັງໄວ້ຢູ່ໃນຄຸກ.
19ແຕ່ໃນເວລາຕອນກາງຄືນ ເທວະດາຂອງອົງພຣະຜູ້ເປັນເຈົ້າໄດ້ເປີດປະຕູຄຸກ ແລະ ນຳພວກເຂົາອອກໄປ, ແລະກ່າວວ່າ,20"ຈົ່ງໄປ,
ຢືນຢູ່ໃນພຣະວິຫານ ແລະ ບອກປະຊາຊົນກ່ຽວກັບບັນດາຖ້ອຍຄຳແຫ່ງຊີວິດນີ້."21ເມື່ອພວກເຂົາໄດ້ຍິນເຊັ່ນນີ້,
ຈຶ່ງໄດ້ເຂົ້າໄປໃນພຣະວິຫານຕອນຮຸ່ງເຊົ້າແລະສັ່ງສອນ. ແຕ່ເມື່ອມະຫາປະໂລຫິດ ແລະ ຜູ້ທີ່ຕິດຕາມນັ້ນໄດ້ມາ,
ກໍເອີ້ນປະຊຸມສະພາຂອງຊາວຢິວ, ພວກຜູ້ອາວຸໂສທັງຫມົດຂອງຊົນຊາດອິດສະຣາເອນ,
ແລະໃຊ້ຄົນໄປທີ່ຄຸກເພື່ອນຳເອົາພວກອັກຄະສາວົກອອກມາ.
22ແຕ່ເມື່ອພວກເຈົ້າຫນ້າທີ່ໄປແລ້ວກໍບໍ່ພົບເຫັນພວກອັກຄະສາວົກຢູ່ໃນຄຸກ, ພວກເຂົາຈຶ່ງໄດ້ກັບມາລາຍງານວ່າ,
23"ພວກເຮົາເຫັນປະຕູຄຸກປິດຢ່າງແໜ້ນໜາແລະພວກຄົນຍາມກໍຢືນເຝົ້າຢູ່ທີ່ປະຕູ, ແຕ່ເມື່ອພວກເຮົາເປີດປະຕູເຂົ້າໄປ,
ກໍບໍ່ເຫັນມີຜູ້ໃດຢູ່ພາຍໃນນັ້ນ."
24ເມື່ອຫົວໜ້າຮັກສາພຣະວິຫານ ແລະ ພວກຫົວໜ້າມະຫາປະໂຣຫິດໄດ້ຍິນຖ້ອຍຄຳເຫລົ່ານີ້,
ພວກເຂົາກໍສັບສົນຫລາຍເຖິງເຫດການກ່ຽວກັບພວກອັກຄະສາວົກ.25ແລ້ວມີບາງຄົນເຂົ້າມາບອກກັບພວກເຂົາວ່າ,
"ພວກຄົນທີ່ທ່ານຂັງໄວ້ຢູ່ໃນຄຸກກຳລັງຢືນສັ່ງສອນປະຊາຊົນຢູ່ໃນພຣະວິຫານ."
26ດັ່ງນັ້ນ ຫົວໜ້າຮັກສາພຣະວິຫານກັບພວກເຈົ້າໜ້າທີ່, ຈຶ່ງໄດ້ອອກໄປນຳຕົວພວກອັກຄະສາວົກກັບມາ, ແຕ່ໂດຍບໍ່ໃຊ້ຄວາມຮຸນແຮງ,
ເພາະວ່າພວກເຂົາຢ້ານວ່າປະຊາຊົນຈະແກ່ວງກ້ອນຫີນໃສ່.27ເມື່ອພວກເຂົາພາພວກອັກຄະສາວົກມາແລ້ວ, ກໍໃຫ້ຢືນຢູ່ຕໍ່ໜ້າສະພາ,
ແລ້ວມະຫາປະໂລຫິດຈຶ່ງສອບຖາມພວກທ່ານ,28ວ່າ, "ຂ້າພະເຈົ້າໄດ້ເຕືອນກັບພວກທ່ານຢ່າງຈິງຈັງແລ້ວວ່າບໍ່ໃຫ້ສັ່ງສອນໂດຍອອກຊື່ນີ້,
ແຕ່ພວກທ່ານກຳລັງເຮັດ, ໃຫ້ຄຳສອນຂອງພວກທ່ານແຜ່ກະຈາຍໄປທົ່ວນະຄອນ ເຢຣູຊາເລັມ,
ແລະຕ້ອງການໃຫ້ຄວາມຜິດເລື່ອງຂອງເລືອດຂອງຊາຍຄົນນີ້ຈະຕົກຢູ່ກັບພວກຂ້າພະເຈົ້າ."
29ເປໂຕ ແລະ ບັນດາອັກຄະສາວົກຕອບວ່າ, "ພວກຂ້າພະເຈົ້າຈຳເປັນຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າເຊື່ອຟັງມະນຸດ.
30ພະເຢຊູຄຣິດເຈົ້າຜູ້ທີ່ທ່ານໄດ້ຂ້າ ແລະ ແຂວນໄວ້ຢູ່ເທິງຕົ້ນໄມ້ ພຣະເຈົ້າຂອງບັນພະບຸລຸດຂອງເຮົາໄດ້ເປັນຄືນມາແລ້ວ.
31ພຣະເຈົ້າຊົງຍົກພຣະອົງຂຶ້ນໄວ້ຢູ່ທີ່ເບື້ອງຂວາພຣະຫັດຂອງພຣະອົງ, ເພື່ອໃຫ້ເປັນອົງພຣະຜູ້ນຳ ແລະ
ເປັນພຣະຜູ້ຊ່ອຍໃຫ້ລອດພົ້ນເພື່ອຈະໃຫ້ຊົນຊາດອິດສະຣາເອນກັບໃຈໃໝ່, ແລະຊົງອະໄພບາບ.32ພວກເຮົາເປັນພະຍານໃນເລື່ອງນີ້,
ແລະພຣະວິນຍານບໍຣິສຸດເຈົ້າ, ຜູ້ທີ່ພຣະເຈົ້າໄດ້ມອບໃຫ້ກັບຄົນເຫລົ່ານັ້ນ ທີ່ເຊື່ອຟັງພຣະອົງກໍຊົງເປັນພະຍານເຊັ່ນກັນ."
33ເມື່ອພວກສະມາຊິກສະພາໄດ້ຍິນແນວນັ້ນ, ກໍແຄ້ນໃຈຫລາຍ ແລະ ຕ້ອງການຂ້າພວກອັກຄະສາວົກ.34ແຕ່ມີຄົນຟາຣີຊາຍຄົນ
ໜຶ່ງຊື່ວ່າຄາມາລິເອັນ, ແລະເປັນອາຈານສອນພຣະບັນຍັດ, ຊຶ່ງເປັນທີ່ເຄົາລົບຈາກປະຊາຊົນ, ໄດ້ຢືນຂຶ້ນ ແລະ
ສັ່ງໃຫ້ພາພວກອັກຄະສາວົກອອກໄປທາງນອກຊົ່ວຄາວ.
35ທ່ານຈຶ່ງກ່າວກັບພວກເຂົາວ່າ, "ທ່ານຊົນຊາດອິດສະຣາເອນ, ສິ່ງທີ່ທ່ານສະເໜີທີ່ຈະເຮັດກັບຄົນເຫລົ່ານີ້ ຈົ່ງລະວັງໃຫ້ດີ.
36ເພາະວ່າກ່ອນຫນ້ານີ້, ທູດາ ໄດ້ປະກົດຕົວຂຶ້ນໂດຍອ້າງວ່າ, ລາວເປັນຕົນສຳຄັນ, ມີຄົນປະມານສີ່ຮ້ອຍຄົນໄດ້ເຂົ້າຮ່ວມກັບລາວ.
ລາວໄດ້ຖືກຂ້າຕາຍ, ແລະ ບັນດາຄົນທີ່ເຊື່ອຟັງລາວກໍກະຈັດກະຈາຍແລະຫາຍສາບສູນໄປ.37ຕໍ່ຈາກຊາຍຄົນນີ້ຄື, ຢູດາ
ຊາວຄາລີເລໄດ້ປະກົດຕົວຂຶ້ນໃນລະຫວ່າງທີ່ມີການຈົດທະບຽນສຳມະໂນຄົວ ແລະກະຕຸ້ນຜູ້ຄົນໃຫ້ຕິດຕາມລາວ. ລາວກໍພິນາດດ້ວຍ,
ແລະບັນດາຄົນທີ່ເຊື່ອຟັງລາວກໍກະຈັດກະຈາຍໄປຫມົດ.


generated on Tue Jun 17 19:01:42 2025

[38]ບັດນີ້ ຂ້າພະເຈົ້າຂໍບອກພວກທ່ານວ່າ, ຈົ່ງປ່ອຍໃຫ້ຄົນເຫລົ່ານີ້ໄປຕາມເລື່ອງ ຢ່າໄປເຮັດຫຍັງກັບພວກເຂົາເລີຍ, ເພາະວ່າຖ້າແມ່ນແຜນການ
ຫລື ກິດຈະການທີ່ມາຈາກມະນຸດ, ມັນຈະພັງລົງໂດຍຕົວຂອງມັນເອງ.[39]ແຕ່ຖ້າມາຈາກພຣະເຈົ້າ,
ພວກທ່ານບໍ່ສາມາດທີ່ຈະໂຄ່ນລົ້ມພວກເຂົາໄດ້; ຢ້ານວ່າພວກທ່ານຈະເປັນຜູ້ຕໍ່ຕ້ານກັບພຣະເຈົ້າ." ດັ່ງນັ້ນພວກເຂົາຈຶ່ງຍອມຟັງຄາມາລີເອັນ.
[40]ພວກເຂົາຈຶ່ງໄດ້ເອີ້ນພວກອັກຄະສາວົກເຂົ້າມາ ແລະ ທຸບຕີພວກທ່ານ ແລະ ສັ່ງຫ້າມບໍ່ໃຫ້ອອກພຣະນາມຂອງພຣະເຢຊູຄຣິດເຈົ້າ,
ແລ້ວປ່ອຍພວກເຂົາໄປ.[41]ພວກອັກຄະສາວົກຈຶ່ງອອກມາຈາກສະພາດ້ວຍຄວາມຊື່ນຊົມຍິນດີ.
ທີ່ເຫັນວ່າພວກເຂົາສົມຄວນທີ່ຈະໄດ້ຮັບການໝິ່ນປະໝາດຍ້ອນພຣະນາມນັ້ນ.[42]ຕັ້ງແຕ່ນັ້ນມາ, ພວກທ່ານກໍຍັງຄົງສືບຕໍ່ສັ່ງສອນ ແລະ
ປະກາດວ່າພຣະເຢຊູຄຣິດເຈົ້າຄືພຣະຄຣິດ, ໃນພຣະວິຫານ, ແລະ ຕາມບ້ານເຮືອນທຸກໆມື້ບໍ່ໄດ້ຂາດ,

6 [1]ໃນເວລານັ້ນ, ເມື່ອພວກສາວົກກຳລັງເພີ່ມທະວີຈຳນວນຂຶ້ນ,
ພວກຊາວຢິວທີ່ເວົ້າພາສາກຣີກກໍພາກັນຈົ່ມກ່ຽວກັບຊາວຢິວທີ່ເວົ້າພາສາເຮັບເຣີ,
ເພາະວ່າບັນດາແມ່ໝ້າຍຂອງພວກເຂົາບໍ່ໄດ້ຮັບການເອົາໃຈໃສ່ ແລະ ບໍ່ໄດ້ຮັບແຈກອາຫານປະຈຳວັນ.

[2]ອັກຄະສາວົກສິບສອງຄົນຈຶ່ງໄດ້ເອີ້ນພວກສາວົກຈຳນວນຫລວງຫລາຍມາຫາພວກທ່ານ ແລະກ່າວວ່າ,
"ມັນເປັນສິ່ງທີ່ບໍ່ສົມຄວນທີ່ພວກເຮົາຈະບໍ່ໃສ່ໃຈພຣະທັມຂອງພຣະເຈົ້າ ແຕ່ເພື່ອໃຫ້ສາມາດມາແຈກຢາຍອາຫານໄດ້ນັ້ນ.[3]ພີ່ນ້ອງທັງຫລາຍ,
ທ່ານຄວນຈະເລືອກເອົາເຈັດຄົນໃນພວກທ່ານ, ທີ່ເປັນຄົນທີ່ມີຊື່ສຽງດີ, ເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດເຈົ້າ, ແລະ ສະຕິປັນຍາ
ຜູ້ທີ່ຂ້າພະເຈົ້າຈະຕັ້ງໃຫ້ເພື່ອເບິ່ງແຍງວຽກງານນີ້.[4]ສ່ວນພວກທ່ານ, ຈະຍັງຄົງຢູ່ໃນການອະທິຖານ ແລະ
ພາລະກິດດ້ານພຣະທັມຂອງພຣະເຈົ້າສະເໝີໄປ."
[5]ຄຳກ່າວຂອງພວກອັກຄະສາວົກເປັນທີ່ພໍໃຈໃຫ້ຝູງຊົນ, ດັ່ງນັ້ນພວກເຂົາຈຶ່ງເລືອກເອົາຊະເຕຟາໂນ, ຜູ້ທີ່ເຕັມໄປດ້ວຍຄວາມເຊື່ອ ແລະ
ພຣະວິນຍານບໍຣິສຸດເຈົ້າ, ແລະ ຟີລິບ, ໂປໂຄໂລ, ນີກາໂນ, ຕີໂມນ, ປາເມນາ, ແລະ ນີໂກລາໂອຊາວເມືອງ
ອັນຕີໂອເຂຍທີ່ເຂົ້າໃນສາສະໜາຢິວ.[6]ບັນດາຜູ້ທີ່ເຊື່ອນຳຄົນເຫລົ່ານີ້ມາຢູ່ຕໍ່ຫນ້າ ພວກອັກຄະສາວົກ, ຜູ້ທີ່ອະທິຖານ ແລະ ວາງມືເທິງພວກເຂົາ.
[7]ເມື່ອພຣະທັມຂອງພຣະເຈົ້າຂະຫຍາຍ ແລະ ຈຳນວນສາວົກໃນນະຄອນ ເຢຣູຊາເລັມເພີ່ມຂຶ້ນຢ່າງວ່ອງໄວ,
ພວກປະໂລຫິດກໍໄດ້ມາເຊື່ອຖືເປັນຈຳນວນຫລາຍ.
[8]ຊະເຕຟາໂນ, ຜູ້ເຕັມໄປດ້ວຍພຣະຄຸນ ແລະ ຣິດເດດ, ໄດ້ເຮັດການອັດສະຈັນ ແລະ ໝາຍສຳຄັນອັນຍິ່ງໃຫຍ່ໃນທ່າມກາງປະຊາຊົນ.
[9]ແຕ່ວ່າມີຄົນຈາກທຳມະສາລາທີ່ເອີ້ນວ່າໂຮງທຳຂອງຊາວຢິວອິບພະຍົບ, ທີ່ເປັນຊາວກີເຣເນ ແລະ ຊາວອາເລັກຊັນເດຍ,
ແລະບາງຄົນຈາກແຂວງກີລີເກຍ ແລະ ເອເຊຍ, ຄົນເຫລົ່ານີ້ກຳລັງໂຕ້ຖຽງກັບຊະເຕຟາໂນ.
[10]ແຕ່ພວກເຂົາບໍ່ສາມາດຕໍ່ສູ້ກັບຖ້ອຍຄຳທີ່ຊະເຕຟາໂນກ່າວດ້ວຍສະຕິປັນຍາ ແລະ ພຣະວິນຍານບໍຣິສູດເຈົ້າໄດ້.
[11]ພວກເຂົາໄດ້ຊັກຊວນບາງຄົນແບບລັບໆເພື່ອໃຫ້ກ່າວວ່າ, "ຂ້າພະເຈົ້າໄດ້ຍິນຊະເຕຟາໂນເວົ້າຖ້ອຍຄຳໝິ່ນປະໝາດໂມເຊ ແລະ ພຣະເຈົ້າ."
[12]ພວກເຂົາປຸກລະດົມປະຊາຊົນ, ພວກຜູ້ອາວຸໂສ, ແລະພວກທຳມະຈານ, ແລະພວກຄົນເຫລົ່ານັ້ນກໍໄດ້ເຂົ້າມາຈັບຊະເຕຟາໂນ ແລະ
ພາຕົວລາວໄປທີ່ສະພາຢິວ.[13]ພວກເຂົາໄດ້ນຳເອົາພະຍານປອມມາ, ກ່າວວ່າ,
"ຊາຍຄົນນີ້ບໍ່ໄດ້ເຊົາເວົ້າຖ້ອຍຄຳໝິ່ນປະໝາດສະຖານທີ່ອັນສັກສິດແຫ່ງນີ້ ແລະ ພຣະບັນຍັດ.[14]ເພາະວ່າຂ້າພະເຈົ້າໄດ້ຍິນລາວເວົ້າວ່າ,
ພະເຢຊູຄຣິດເຈົ້າແຫ່ງນາຊາເຣັດຄົນນີ້ຈະທຳລາຍສະຖານທີ່ແຫ່ງນີ້ ແລະ
ປ່ຽນທຳນຽມທີ່ໂມເຊໄດ້ມອບໃຫ້ພວກເຮົາໄວ້."[15]ທຸກຄົນທີ່ນັ່ງຢູ່ໃນສະພາຢິວກໍແນມໄປເບິ່ງທີ່ ຊະເຕຟາໂນ ແລະ
ເຫັນໜ້າຂອງທ່ານຄືກັບໜ້າຂອງເທວະດາ.


generated on Tue Jun 17 19:01:42 2025

7 [1]ມະຫາປະໂລຫິດຈຶ່ງໄດ້ຖາມວ່າ, "ແມ່ນເລື່ອງຈິງແທ້ບໍ?"[2]ຊະເຕຟາໂນຕອບວ່າ, "ພີ່ນ້ອງທັງຫລາຍແລະທ່ານທີ່ເປັນຜູ້ອາວຸໂສ, ຂໍຈົ່ງຟັງຂ້າພະ
ເຈົ້າເຖີດ: ພຣະເຈົ້າແຫ່ງສະຫງ່າລາສີໄດ້ປະກົດຕໍ່ອັບຣາຮາມບິດາຂອງພວກເຮົາ ເມື່ອທ່ານຍັງຢູ່ ເມໂຊໂປຕາເມຍ,
ກ່ອນທີ່ທ່ານຈະໄປອາໄສຢູ່ໃນເມືອງ ຮາຣານ;[3]ພຣະອົງກ່າວກັບທ່ານວ່າ, 'ຈົ່ງອອກໄປຈາກແຜ່ນດິນຂອງເຈົ້າ ແລະ ຍາດພີ່ນ້ອງຂອງເຈົ້າ,
ແລະໄປທີ່ແຜ່ນດິນທີ່ເຮົາຈະສະແດງແກ່ເຈົ້າ.'

[4]ອັບຣາຮາມຈຶ່ງອອກຈາກດິນແດນຂອງຊາວເຄນເດຍ. ແລະໄດ້ໄປອາໄສຢູ່ເມືອງຮາຣານ; ຫລັງຈາກບິດາຂອງທ່ານໄດ້ເສຍຊີວິດໄປແລ້ວ,
ພຣະເຈົ້າໄດ້ຊົງນຳທ່ານອອກມາຈາກທີ່ນັ້ນ, ມາສູ່ດິນແດນທີ່ພວກທ່ານອາໄສຢູ່ໃນທຸກມື້ນີ້.[5]ພຣະອົງບໍ່ໄດ້ປະ
ທານແຜ່ນດິນນັ້ນໃຫ້ເປັນມໍລະດົກແກ່ອັບຣາຮາມ, ບໍ່ມີແມ່ນແຕ່ຂະໜາດເທົ່າທີ່ຕີນຂອງທ່ານຈະຢຽບໄດ້. ແຕ່ພຣະອົງຊົງສັນຍາວ່າ ພຣະ
ອົງຈະມອບແຜ່ນດິນນັ້ນໃຫ້ເປັນກຳມະສິດແກ່ທ່ານ ແລະ ແກ່ເຊື້ອສາຍຂອງທ່ານເຖິງແມ່ນວ່າອັບຣາຮາມຈະບໍ່ມີລູກເລີຍກໍຕາມ.
[6]ພຣະເຈົ້າກ່າວກັບທ່ານດັ່ງນີ້ວ່າ, ເຊື້ອສາຍຂອງທ່ານຈະອາໄສຢູ່ດິນແດນຂອງຄົນຕ່າງຊາດຊົ່ວຄາວ,
ແລະຄົນໃນປະເທດນັ້ນຈະເຮັດໃຫ້ພວກເຂົາກາຍມາເປັນຂ້າທາດ ແລະ ຂົ່ມເຫັງພວກເຂົາເປັນເວລາສີ່ຮ້ອຍປີ.[7]ພຣະເຈົ້າກ່າວວ່າ, 'ຂ້າພະ
ເຈົ້າຈະພິພາກສາຊົນຊາດທີ່ພວກເຂົາກຳລັງຮັບໃຊ້ຢູ່ນັ້ນ,' ຫລັງຈາກນັ້ນ ພວກເຂົາຈະອອກມາ ແລະ ນະມັດສະການເຮົາໃນສະຖານທີ່ແຫ່ງ
ນີ້.'[8]ພຣະເຈົ້າຈຶ່ງໄດ້ໃຫ້ພັນທະສັນຍາແຫ່ງພິທີຕັດກັບອັບຣາຮາມເພາະເຫດນີ້, ເມື່ອອັບຣາຮາມໄດ້ກາຍເປັນບິດາຂອງອີຊາກ
ຈຶ່ງໄດ້ຮັບພິທີຕັດໃນວັນທີແປດ; ອີຊາກເປັນບິດາຂອງຢາໂຄບ, ຢາໂຄບເປັນບິດາຂອງລູກຊາຍສິບສອງຄົນທີ່ເປັນບັນພະບຸລຸດຂອງຂ້າພະເຈົ້າ.
[9]ບັນພະບຸລຸດຂອງພວກເຮົາເຫລົ່ານັ້ນມີຈິດໃຈທີ່ອິດສາໂຢເຊັບ, ຈຶ່ງໄດ້ຂາຍທ່ານໄປທີ່ປະເທດເອຢິບ; ແລະພຣະເຈົ້າສະຖິດຢູ່ກັບ
ທ່ານ[10]ແລະຊ່ວຍທ່ານໃຫ້ພົ້ນຈາກຄວາມທຸກຍາກທຸກຢ່າງ ແລະ ຊົງໃຫ້ທ່ານເປັນທີ່ພໍໃຈ ແລະ ສະຫລາດຕໍ່ໜ້າຟາໂຣ, ກະສັດແຫ່ງເອຢິບ,
ຟາໂຣຈຶ່ງຕັ້ງທ່ານໃຫ້ປົກຄອງປະເທດເອຢິບ ແລະ ທຸກຢ່າງໃນພະຣາຊະວັງຂອງພຣະອົງ.
[11]ຕໍ່ມາເກີດມີຄວາມອຶດຢາກຂຶ້ນທົ່ວປະເທດເອຢິບ ແລະ ການາອານ, ແລະ ເກີດຄວາມທຸກຍາກຢ່າງໃຫຍ່ຫລວງ, ບັນພະບຸລຸດຂອງພວກທ່ານ
ຈຶ່ງບໍ່ມີອາຫານ.[12]ເມື່ອຢາໂຄບໄດ້ຍິນວ່າມີເຂົ້າຢູ່ໃນປະເທດເອຢິບ, ທ່ານຈຶ່ງໃຊ້ບັນພະບຸລຸດຂອງພວກເຮົາໄປເປັນເທື່ອທຳອິດ.
[13]ຄັ້ງທີສອງໂຢເຊັບໄດ້ສະແດງຕົວເອງໃຫ້ພີ່ນ້ອງຮູ້, ແລະ ຟາໂຣກໍໄດ້ຮູ້ຈັກຄອບຄົວຂອງໂຢເຊັບ.
[14]ໂຢເຊັບຈຶ່ງສົ່ງພີ່ນ້ອງກັບໄປບອກບິດາຂອງທ່ານໃຫ້ມາທີ່ປະເທດເອຢິບ, ພ້ອມທັງບັນດາພີ່ນ້ອງທັງໝົດ ເຈັດສິບ-ຫ້າຄົນ.[15]ດັ່ງນັ້ນ
ຢາໂຄບຈຶ່ງລົງໄປທີ່ປະເທດເອຢິບ, ທ່ານກັບບັນພະບຸລຸດຂອງພວກທ່ານ. ໄດ້ເສຍຊີວິດຢູ່ທີ່ນັ້ນ,[16]ພວກເຂົາຖືກນຳກັບຄືນມາທີ່ເມືອງ ຊີເຄມ ແລະ
ໄດ້ຖືກຝັງໄວ້ໃນອຸບໂມງຝັງສົບທີ່ອັບຣາຮາມໄດ້ຊື້ດ້ວຍເງິນຈຳນວນໜຶ່ງຈາກລູກຂອງຮາໂມໃນເມືອງຊີເຄມ.
[17]ເມື່ອເຖິງເວລາຕາມພຣະສັນຍາ, ທີ່ພຣະເຈົ້າຊົງສັນຍາໄວ້ກັບອັບຣາຮາມ, ຊົນຊາດອິດສະຣາເອນໄດ້ທະວີຄູນຫລາຍຂຶ້ນຢູ່ໃນປະເທດເອຢິບ,
[18]ຈົນວ່າກະສັດອີກອົງໜຶ່ງທີ່ບໍ່ຮູ້ຈັກໂຢເຊັບ ໄດ້ຂຶ້ນປົກຄອງປະເທດເອຢິບ,[19]ກະສັດອົງດຽວກັນນີ້ທີ່ໄດ້ອອກອຸບາຍກັບຊົນຊາດຂອງພວກທ່ານ
ແລະ ຂົ່ມເຫັງບັນພະບຸລຸດຂອງພວກເຮົາຢ່າງໂຫດຮ້າຍ, ພວກເຂົາບັງຄັບໃຫ້ບັນພະບຸລຸດຂອງພວກເຮົາເຮັດອັນຕະລາຍແກ່ເດັກນ້ອຍເກີດໃໝ່,
ຂອງພວກເຂົາເພື່ອບໍ່ໃຫ້ເດັກມີຊີວິດລອດ.
[20]ເມື່ອເຖິງເວລາເກີດຂອງໂມເຊ; ທ່ານມີຮູບຮ່າງທີ່ສວຍງາມຢູ່ຕໍ່ພຣະພັກພຣະເຈົ້າ ແລະ ໄດ້ຮັບການລ້ຽງດູຢູ່ໃນເຮືອນຂອງບິ
ດາເປັນເວລາສາມເດືອນ.[21]ເມື່ອທ່ານຖືກນຳມາຖິ້ມໄວ້ຢູ່ນອກເຮືອນ, ລູກສາວຂອງຟາໂຣກໍໄດ້ຮັບມາລ້ຽງ ແລະ ເບິ່ງແຍງທ່ານຄ້າຍ
ຄືບຸດຊາຍຂອງຕົນເອງ.
[22]ໂມເຊໄດ້ຮັບການສຶກສາຄວາມຮູ້ທຸກຢ່າງຂອງຊາວເອຢິບ, ແລະທ່ານກໍມີຄວາມສາມາດໃນການເວົ້າ ແລະ ວຽກງານຕ່າງໆ.
[23]ແຕ່ເມື່ອທ່ານມີອາຍຸປະມານສີ່ສິບປີ, ທ່ານກໍຄິດຢາກໄປຢ້ຽມຢາມພີ່ນ້ອງຂອງທ່ານ, ທີ່ເປັນເຊື້ອສາຍຄົນອິດສະຣາເອນ.
[24]ທ່ານໄດ້ເຫັນຄົນອິດສະຣາເອນຄົນໜຶ່ງຖືກຂົ່ມເຫັງ, ໂມເຊໄດ້ປົກປ້ອງ ແລະ ແກ້ແຄ້ນຄົນທີ່ຂົ່ມເຫັງນັ້ນໂດຍການຂ້າຊາວເອຢິບຄົນນັ້ນເສຍ:
[25]ທ່ານຄິດວ່າພີ່ນ້ອງຂອງທ່ານຈະເຂົ້າໃຈວ່າ ພຣະເຈົ້າໄດ້ຊ່ວຍພວກເຂົາດ້ວຍມືຂອງຕົນ, ແຕ່ພວກເຂົາບໍ່ເຂົ້າໃຈໃນເລື່ອງນັ້ນ.
[26]ມື້ຕໍ່ມາໂມເຊໄດ້ມາພົບຄົນອິດສະຣາເອນ ໃນຂະນະທີ່ພວກເຂົາກຳລັງຕໍ່ສູ້ກັນຢູ່; ທ່ານຈຶ່ງພະຍາຍາມທີ່ຈະເຮັດໃຫ້ພວກເຂົາຄືນດີກັນ; ທ່ານ
ກ່າວວ່າ, 'ເພື່ອນເອີຍ, ພວກທ່ານເປັນພີ່ນ້ອງກັນ; ເປັນຫຍັງພວກທ່ານຈຶ່ງຕໍ່ສູ້ກັນ ແລະ ກັນ?'[27]ແຕ່ຜູ້ທີ່ໄດ້ເຮັດຜິດຕໍ່ເພື່ອນບ້ານໄດ້ຊຸກທ່ານອອກ,
ແລະກ່າວວ່າ, 'ໃຜແຕ່ງຕັ້ງເຈົ້າໃຫ້ເປັນຜູ້ປົກຄອງ ແລະ ຕັດສິນເໜືອພວກເຮົາ?[28]ທ່ານຢາກຈະຂ້າ ຂ້ານ້ອຍ,
ເໝືອນກັບທີ່ທ່ານໄດ້ຂ້າຊາວເອຢິບຄົນນັ້ນໃນມື້ວານນີ້ບໍ?'
[29]ຫລັງຈາກທີ່ໂມເຊໄດ້ຍິນດັ່ງນັ້ນຈຶ່ງໜີໄປ; ແລະເປັນຄົນຕ່າງຊາດຢູ່ໃນດິນແດນມີດີອານ, ທ່ານໄດ້ເປັນບິດາຂອງລູກຊາຍສອງຄົນຢູ່ທີ່ນັ້ນ.
[30]ເມື່ອສີ່ສິບປີຜ່ານໄປ, ເທວະດາອົງໜຶ່ງໄດ້ມາປະກົດຕົວຕໍ່ທ່ານເປັນແປວໄຟໃນພຸ່ມໄມ້, ໃນຖິ່ນທຸລະກັນດານຂອງພູເຂົາຊີນາຍ.
[31]ເມື່ອໂມເຊໄດ້ເຫັນແປວໄຟນັ້ນ, ທ່ານກໍເບິ່ງດ້ວຍຄວາມປະຫລາດໃຈ; ເມື່ອທ່ານເຂົ້າໄປເບິ່ງໃກ້ໆ, ກໍໄດ້ຍິນພ
ຣະສຸລະສຽງຂອງອົງພຣະຜູ້ເປັນເຈົ້າ, ກ່າວອອກມາວ່າ,[32]'ເຮົາແມ່ນພຣະເຈົ້າຂອງບັນພະບຸລຸດຂອງເຈົ້າ, ເປັນພຣະເຈົ້າຂອງອັບຣາຮາມ,
ອີຊາກ, ແລະຢາໂຄບ.' ໂມເຊກໍຢ້ານຈົນໂຕສັ່ນບໍ່ກ້າທີ່ຈະແນມເບິ່ງ.
[33]ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບທ່ານວ່າ, 'ຈົ່ງປົດເກີບຂອງເຈົ້າອອກ, ເພາະວ່າສະຖານທີ່ເຈົ້າຢືນຢູ່ນີ້ເປັນບ່ອນທີ່ບໍຣິສຸດ.
[34]ເຮົາໄດ້ເຫັນຄວາມທຸກຍາກລຳບາກຂອງຊົນຊາດຂອງເຮົາທີ່ອາໄສຢູ່ໃນປະເທດເອຢິບແລ້ວ; ເຮົາໄດ້ຍິນສຽງຮ້ອງໂອດຄາງຂອງພວກເຂົາ.
ເຮົາຈຶ່ງລົງມາເພື່ອຈະຊ່ວຍພວກເຂົາໃຫ້ລອດພົ້ນ; ບັດນີ້, ເຮົາຈະໃຊ້ເຈົ້າໄປທີ່ປະເທດເອຢິບ.'
[35]ໂມເຊຄົນນີ້ແຫລະທີ່ພວກເຂົາເຄີຍປະຕິເສດ, ເມື່ອພວກເຂົາເວົ້າ, 'ໃຜແຕ່ງຕັ້ງທ່ານໃຫ້ເປັນຜູ້ປົກຄອງ ແລະ ຜູ້ຕັດສິນ?'—ທ່ານເປັນຜູ້
ທີ່ພຣະເຈົ້າສົ່ງໄປຊຶ່ງເປັນທັງຜູ້ປົກຄອງ ແລະ ຜູ້ປົດປ່ອຍ. ພຣະເຈົ້າຊົງໃຊ້ທ່ານໄປໂດຍມີເທວະດາອົງໜຶ່ງທີ່ປະກົດຕົວແກ່ໂມເຊໃນພຸ່ມໄມ້.
[36]ໂມເຊໄດ້ນຳພວກເຂົາອອກຈາກປະເທດເອຢິບ, ຫລັງຈາກໄດ້ເຮັດການອັດສະຈັນ ແລະ ໝາຍສຳຄັນຕ່າງໆໃນປະເທດເອຢິບ ແລະ
ທີ່ທະເລແດງ, ແລະລະຫວ່າງທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານສີ່ສິບປີ.[37]ໂມເຊຄົນດຽວກັນນີ້ ຜູ້ທີ່ກ່າວກັບຊົນຊາດອິດສະຣາເອນວ່າ,
'ພຣະເຈົ້າຈະໃຫ້ຜູ້ທຳນວາຍຜູ້ໜຶ່ງເກີດມາໃນທ່າມກາງພີ່ນ້ອງຂອງພວກທ່ານ, ເປັນຜູ້ທຳນວາຍຄືກັນກັບຂ້າພະເຈົ້າ.'
[38]ໂມເຊຜູ້ນີ້ແມ່ນຜູ້ທີ່ຢູ່ໃນການຊຸມນຸມ ໃນຖິ່ນທຸລະກັນດານກັບເທວະດາທີ່ໄດ້ລົມກັບທ່ານເທິງພູເຂົາຊີນາຍ.
ຊາຍຄົນນີ້ແຫລະທີ່ຢູ່ກັບບັນພະບຸລຸດຂອງພວກທ່ານ; ຊາຍຄົນນີ້ແຫລະທີ່ໄດ້ຮັບພຣະຄັມອັນຊົງຊີວິດທີ່ມອບໃຫ້ແກ່ພວກທ່ານ.[39]ຊາຍຄົນນີ້


generated on Tue Jun 17 19:01:42 2025

ແຫລະ ທີ່ບັນພະບຸລຸດຂອງຂ້າພະເຈົ້າປະຕິເສດບໍ່ຍອມເຊື່ອຟັງ; ພວກເຂົາໄດ້ຍູ້ທ່ານອອກໄປຈາກທາງຂອງພວກເຂົາ,
ແລະໃນໃຈຂອງພວກເຂົາຄິດວ່າຈະກັບໄປທີ່ປະເທດເອຢິບ.[40]ໃນເວລານັ້ນ ພວກເຂົາເວົ້າກັບອາໂຣນວ່າ, 'ຈົ່ງສ້າງພະເຈົ້າອົງອື່ນໆ
ສຳລັບພວກເຮົາ. ເພາະວ່າໂມເຊຜູ້ທີ່ໄດ້ນຳພວກຂ້າພະເຈົ້າອອກມາຈາກປະເທດເອຢິບ, ພວກເຮົາບໍ່ຮູ້ວ່າມີຫຍັງເກີດຂຶ້ນກັບລາວ.'
[41]ດັ່ງນັ້ນ ພວກເຂົາຈຶ່ງສ້າງຮູບງົວຂຶ້ນໂຕໜຶ່ງໃນຕອນນັ້ນ ແລະ ໄດ້ນຳເຄື່ອງບູຊາມາຖວາຍຕໍ່ຮູບເຄົາລົບນັ້ນ, ແລະ ມີຄວາມມ່ວນຊື່ນຍິນ
ດີຈາກຜົນງານທີ່ສ້າງຂຶ້ນມາດ້ວຍມືຂອງພວກເຂົາເອງ.[42]ແຕ່ພຣະຜູ້ເປັນເຈົ້າຫລຽວເຫັນ
ແລະປ່ອຍໃຫ້ພວກເຂົາຂາບໄຫວ້ບັນດາດາວເທິງທ້ອງຟ້າ, ຕາມທີ່ມີຄຳຂຽນໄວ້ໃນຫນັງສືຂອງບັນດາຜູ້ທຳນວາຍວ່າ,
'ເຊື້ອສາຍອິດສະຣາເອນເອີຍ, ພວກທ່ານໄດ້ຖວາຍສັດທີ່ຖືກຂ້າ ແລະ ເຄື່ອງບູຊາເປັນເວລາສີ່ສິບປີໃນຖິ່ນແຫ້ງແລ້ງກັນດານບໍ?
[43]ພວກທ່ານຮັບເອົາຜ້າເຕັ້ນຂອງພະໂມເລັກ ແລະ ດາວຂອງພະເຣຟານ, ແລະ ຮູບປັ້ນຮູບລັກສະນະຕ່າງໆ ທີ່ທ່ານໄດ້ເຮັດຂຶ້ນເພື່ອກາບ
ໄຫວ້ເຄົາລົບຮູບເຫລົ່ານັ້ນ: ດັ່ງນັ້ນ ເຮົາຈະກວາດພວກທ່ານໄປທີ່ບາບີໂລນ.'
[44]ບັນພະບຸລຸດຂອງພວກເຮົາມີຫໍເຕັນແຫ່ງພະຍານຢູ່ໃນຖິ່ນແຫ້ງແລ້ງກັນດານ. ຕາມທີ່ພຣະເຈົ້າໄດ້ຊົງບັນຊາໄວ້, ເມື່ອພຣະອົງກ່າວກັບໂມເຊ,
ໃຫ້ທ່ານເຮັດຫໍເຕັນຕາມແບບທີ່ທ່ານໄດ້ເຫັນ.[45]ຫໍເຕັນນີ້ທີ່ບັນພະບຸລຸດຂອງພວກເຮົາຂົນຍ້າຍຕາມໂຢຊວຍ, ໄປຍັງດິນແດນ
ພາຍຫລັງເຂົ້າຍຶດຄອງເອົາແຜ່ນດິນຂອງປະຊາຊົນທີ່ພຣະເຈົ້າໄດ້ຂັບໄລ່ໃຫ້ອອກໄປ ຂະນະທີ່ພວກເຂົາບຸກຫນ້າເຂົ້າໄປ.
ຫໍເຕັນນີ້ກໍຍັງຄົງຢູ່ມາຮອດສະໄໝຂອງດາວິດ,[46]ຜູ້ທີ່ໄດ້ຮັບຄວາມເຫັນດີໃນສາຍຕາຂອງພຣະເຈົ້າ
ທ່ານໄດ້ຂໍໃຫ້ພຣະເຈົ້າອະນຸຍາດໃຫ້ສ້າງເຮືອນສຳລັບພຣະເຈົ້າຂອງຢາໂຄບ.
[47]ແຕ່ຊາໂລໂມນໄດ້ສ້າງພຣະວິຫານຂອງພຣະເຈົ້າ.[48]ເຖິງຢ່າງໃດກໍຕາມ, ອົງຜູ້ສູງສຸດກໍບໍ່ໄດ້ອາໄສຢູ່ໃນພຣະວິຫານທີ່ສ້າງດ້ວຍມືຂອງມະນຸດ,
ຕາມທີ່ຜູ້ທຳນວາຍໄດ້ກ່າວໄວ້ວ່າ,[49]ອົງພຣະຜູ້ເປັນເຈົ້າໄດ້ກ່າວວ່າ, 'ສະຫວັນແມ່ນບ່ອນຢູ່ອາໄສຂອງເຮົາ, ໂລກແມ່ນບ່ອນທີ່ຮອງຕີນຂອງເຮົາ.
ພວກເຈົ້າຈະສ້າງພຣະວິຫານແບບໃດໃຫ້ກັບເຮົາ? ຫລື ສະຖານທີ່ໃດຈະເປັນບ່ອນຢູ່ອາໄສຂອງເຮົາ?
[50]ມືຂອງເຮົາໄດ້ສ້າງສິ່ງເຫລົ່ານີ້ທັງໝົດບໍ່ແມ່ນບໍ?'
[51]ທ່ານພວກຜູ້ທີ່ດື້ດ້ານ ໃຈແຂງກະດ້າງ ແລະ ຫູຕຶງ, ພວກທ່ານຂັດຂວາງພຣະວິນຍານບໍຣິສຸດເຈົ້າຢູ່ສະເໝີ;
ທ່ານໄດ້ເຮັດຄືກັບທີ່ບັນພະບຸລຸດຂອງພວກທ່ານໄດ້ເຮັດ.[52]ມີຜູ້ທຳນວາຍຄົນໃດແດ່ທີ່ບັນພະບຸລຸດຂອງທ່ານບໍ່ໄດ້ຂົ່ມເຫັງ? ພວກເຂົາໄດ້ຂ້າບັນດາຜູ້
ທຳນວາຍ ທີ່ທຳນວາຍເຖິງການສະເດັດມາຂອງຜູ້ຊອບທຳ; ແລະບັດນີ້ ພວກທ່ານກໍເປັນຄົນທໍລະຍົດ ແລະ ຄາດຕະກອນຕໍ່ພຣະອົງດ້ວຍ,
[53]ພວກທ່ານທີ່ໄດ້ຮັບຄຳສັ່ງຈາກເຫລົ່າເທວະດາ, ແຕ່ບໍ່ໄດ້ປະຕິບັດຕາມຄຳສັ່ງນັ້ນ."
[54]ເມື່ອພວກຊະມາຊິກສະພາໄດ້ຍິນແນວນັ້ນ, ພວກເຂົາກໍມີຄວາມຄຽດແຄ້ນແໜ້ນໃຈຫລາຍ, ແລະ ກັດແຂ້ວຂອງຕົນໃສ່ຊະເຕຟາໂນ.
[55]ແຕ່ຊະເຕຟາໂນເຕັມໄປດ້ວຍພຣະວິນຍານບໍຣິສຸດເຈົ້າ, ຫລຽວເບິ່ງທີ່ຟ້າສະຫວັນ ແລະ ເຫັນລັດສະໝີຂອງພຣະເຈົ້າ;
ແລະທ່ານໄດ້ເຫັນພຣະເຢຊູຄຣິດເຈົ້າຊົງຢືນຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ.[56]ຊະເຕຟາໂນກ່າວວ່າ, "ເບິ່ງເຖີດ, ຂ້າພະ
ເຈົ້າເຫັນທ້ອງຟ້າເປີດອອກ, ແລະບຸດມະນຸດຊົງຢືນຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ."
[57]ແຕ່ພວກສະມາຊິກສະພາໄດ້ຮ້ອງອອກມາຢ່າງແຮງ, ແລະອັດຫູຂອງພວກເຂົາ, ແລ້ວພາກັນແລ່ນເຂົ້າໄປຫາທ່ານ.
[58]ພວກເຂົາຂັບໄລ່ທ່ານອອກໄປຈາກເມືອງນັ້ນແລ້ວເອົາກ້ອນຫີນແກ່ວງໃສ່ທ່ານ, ພວກຄົນທີ່ເຫັນເຫດການນັ້ນໄດ້ວາງເຄື່ອງນຸ່ງຂອງພວກເຂົາໄວ້
ທີ່ຕີນຂອງຊາຍໜຸ່ມຄົນໜຶ່ງທີ່ຊື່ວ່າ ໂຊໂລ.
[59]ໃນຂະນະທີ່ພວກເຂົາແກວ່ງກ້ອນຫີນໃສ່ຊະເຕຟາໂນ, ທ່ານກໍຍັງຮ້ອງທູນຕໍ່ອົງພຣະຜູ້ເປັນເຈົ້າວ່າ, "ອົງພຣະເຢຊູຄຣິດເຈົ້າ,
ຂໍຊົງຮັບເອົາວິນຍານຂອງຂ້າພະອົງ."[60]ທ່ານຄຸເຂົ່າລົງ ແລະ ຮ້ອງສຽງດັງວ່າ, "ພຣະຜູ້ເປັນເຈົ້າ, ຂໍຢ່າຊົງຖືໂທດບາບຕໍ່ພວກເຂົາເລີຍ."
ເມື່ອທ່ານກ່າວດັ່ງນີ້ແລ້ວ, ທ່ານກໍລ່ວງຫລັບໄປ.

8 [1]ໂຊໂລເຫັນດີກັບການຕາຍຂອງຊະເຕຟາໂນ. ໃນມື້ນັ້ນກໍເກີດການຂົ່ມເຫັງຄຣິສຕະຈັກຢ່າງໃຫຍ່ຫລວງໃນນະຄອນ ເຢຣູຊາເລັມ; ບັນ
ດາຜູ້ທີ່ເຊື່ອກໍກະຈັກກະຈາຍໄປທົ່ວແຂວງຢູດາຍ ແລະ ແຂວງຊາມາເຣຍ, ຍົກເວັ້ນພວກອັກຄະສາວົກ.[2]ບັນດາຄົນທີ່ຢຳເກງພຣະເຈົ້າກໍຝັງສົບ
ຂອງຊະເຕຟາໂນ ແລະ ຮ້ອງໄຫ້ເສຍໃຈເຖິງທ່ານຫລາຍ.[3]ແຕ່ໂຊໂລໄດ້ໂຈມຕີຄຣິສຕະຈັກຢ່າງຫນັກ; ທ່ານໄດ້ເຂົ້າໄປຕາມເຮືອນ ແລະ
ລາກເອົາຜູ້ຊາຍແລະຜູ້ຍິງອອກມາ, ແລ້ວເອົາພວກເຂົາໄປຂັງໄວ້ໃນຄຸກ.

[4]ຜູ້ທີ່ເຊື່ອທີ່ກະຈັດກະຈາຍໄປ ກໍອອກໄປປະກາດພຣະທັມຂອງພຣະເຈົ້າ.[5]ຟີລິບໄດ້ລົງໄປທີ່ເມືອງໜຶ່ງຂອງແຂວງ ຊາມາເຣຍ
ແລະປະກາດພຣະຄຣິດໃຫ້ພວກເຂົາ.
[6]ເມື່ອຝູງຊົນໄດ້ຍິນ ແລະໄດ້ເຫັນການອັດສະຈັນ ແລະໝາຍສຳຄັນທີ່ຟີລິບໄດ້ເຮັດ, ພວກເຂົາກໍພາກັນສົນໃຈຟັງຖ້ອຍຄຳທີ່ທ່ານສອນ.
[7]ເພາະໃນຄົນຫລວງຫລາຍນັ້ນ, ມີຜີຊົ່ວຮ້າຍທີ່ຮ້ອງສຽງດັງອອກມາຈາກພວກເຂົາ, ຄົນທີ່ເປັນອຳມະພາດ ແລະ ຄົນເປ້ຍ
ກໍໄດ້ຮັບການຮັກສາໃຫ້ຫາຍດີ.[8]ຈຶ່ງມີຄວາມຊື່ນຊົມຍິນດີທີ່ສຸດໃນເມືອງນັ້ນ.
[9]ມີຊາຍຄົນໜຶ່ງໃນເມືອງນັ້ນຊື່ວ່າ ຊີໂມນ, ທີ່ເປັນຄົນໃຊ້ເວດມົນຄາຖາມາກ່ອນ, ລາວເຄີຍເຮັດໃຫ້ຊາວຊາມາເຣຍຫລົງໄຫລ,
ເມື່ອລາວຍົກຕົວເອງໃຫ້ເປັນຜູ້ວິເສດ.[10]ຊາວຊາມາເຣຍທຸກໆຄົນ, ຕັ້ງແຕ່ຄົນນ້ອຍທີ່ສຸດຈົນເຖິງໃຫຍ່ທີ່ສຸດ, ຕ່າງກໍສົນໃຈທີ່ຈະຟັງລາວ;
ພວກເຂົາກ່າວວ່າ, "ຊາຍຄົນນີ້ມີຣິດອຳນາດຂອງພຣະເຈົ້າ ຊຶ່ງຄົນເອີ້ນວ່າຣິດອຳນາດສູງສຸດ."[11]ພວກເຂົາຟັງຊີໂມນ,
ເພາະວ່າລາວເຮັດໃຫ້ຄົນເຫລົ່ານັ້ນຫລົງໄຫລກັບເວດມົນຂອງລາວມາດົນນານແລ້ວ.
[12]ແຕ່ເມື່ອພວກເຂົາເຊື່ອໃນຂ່າວປະເສີດທີ່ຟີລິບໄດ້ປະກາດ ກ່ຽວກັບຣາຊອານາຈັກຂອງພຣະເຈົ້າ ແລະ ນາມຊື່ຂອງພຣະເຢຊູຄຣິດເຈົ້າ,
ພວກເຂົາກໍຮັບບັບຕິສະມາ, ທັງຊາຍ ແລະ ຍິງ.[13]ເຖິງແມ່ນຊີໂມນເອງກໍເຊື່ອເຊັ່ນກັນ, ຫລັງຈາກທີ່ລາວໄດ້ຮັບບັບຕິສະມາແລ້ວ, ລາວກໍຍັງຢູ່ກັບຟີ
ລິບຕໍ່ໄປ. ເມື່ອລາວເຫັນໝາຍສຳຄັນ ແລະ ການອັດສະຈັນທີ່ເກີດຂຶ້ນ, ລາວກໍປະຫລາດໃຈ.
[14]ແຕ່ເມື່ອພວກອັກຄະສາວົກໃນນະຄອນ ເຢຣູຊາເລັມໄດ້ຍິນວ່າຊາວຊາມາເຣຍໄດ້ຮັບເອົາພຣະທຳຂອງພຣະເຈົ້າແລ້ວ,
ພວກເຂົາຈຶ່ງສົ່ງເປໂຕກັບໂຢຮັນໄປ.[15]ເມື່ອເປໂຕກັບໂຢຮັນມາຮອດ, ພວກທ່ານກໍອະທິຖານເພື່ອພວກເຂົາ,
ທີ່ພວກເຂົາຈະໄດ້ຮັບພຣະວິນຍານບໍຣິສຸດເຈົ້າ.[16]ເພາະວ່າຈົນຮອດຕອນນັ້ນ, ພຣະວິນຍານບໍຣິສຸດເຈົ້າຍັງບໍ່ໄດ້ສະເດັດລົງມາຢູ່ກັບຜູ້ໃດເລີຍ;
ພວກທ່ານພຽງແຕ່ໄດ້ຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າເທົ່ານັ້ນ.[17]ແລ້ວເປໂຕກັບໂຢຮັນຈຶ່ງວາງມືໃສ່ພວກເຂົາ,
ພວກທ່ານກໍໄດ້ຮັບພຣະວິນຍານບໍຣິສຸດເຈົ້າ.
[18]ເມື່ອຊີໂມນເຫັນວ່າພວກເຂົາໄດ້ຮັບພຣະວິນຍານບໍຣິສຸດເຈົ້າໂດຍການວາງມືຂອງພວກອັກຄະສາວົກ, ລາວຈຶ່ງນຳເອົາເງິນມາໃຫ້ພວກທ່ານ.
[19]ແລະຊຶ່ງກ່າວວ່າ, "ຂໍຣິດອຳນາດນີ້ໃຫ້ຂ້າພະເຈົ້າ, ເໝືອນກັນ, ເພື່ອວ່າຜູ້ໃດກໍຕາມທີ່ຂ້າພະເຈົ້າວາງມືຈະໄດ້ຮັບພຣະວິນຍານບໍຣິສຸດ."
[20]ເປໂຕໄດ້ກ່າວກັບລາວວ່າ, "ຂໍໃຫ້ເງິນຂອງທ່ານຈິບຫາຍໄປພ້ອມກັບທ່ານ, ເພາະວ່າທ່ານຄິດວ່າຈະຊື້ຂອງປະທານຈາກພຣະເຈົ້າດ້ວຍເງິນ.
[21]ທ່ານບໍ່ມີຮ່ວມໃນພັນທະກິດໃດໆ, ເພາະຈິດໃຈຂອງທ່ານບໍ່ສັດຊື່ຕໍ່ພຣະເຈົ້າ.[22]ເພາະສະນັ້ນ ຈົ່ງກັບໃຈຈາກຄວາມຊົ່ວຮ້າຍຂອງທ່ານ
ແລະອະທິຖານຕໍ່ອົງພຣະຜູ້ເປັນເຈົ້າ, ເພື່ອວ່າພຣະອົງອາດຈະຍົກໂທດໃຫ້ກັບເຈົ້າໃນ ສິ່ງທີ່ຢູ່ໃນໃຈຂອງທ່ານ.[23]ເພາະວ່າຂ້າພະ
ເຈົ້າເຫັນທ່ານຢູ່ໃນອັນຕະລາຍຂອງຄວາມຂົມຂື່ນ ແລະ ໃນການເປັນທາດຂອງຄວາມບາບ."
[24]ຊີໂມນຕອບວ່າ, "ຂໍໃຫ້ພວກທ່ານອະທິຖານຫາອົງພຣະຜູ້ເປັນເຈົ້າເພື່ອຂ້າພະເຈົ້າດ້ວຍ, ເພື່ອວ່າສິ່ງທີ່ທ່ານກ່າວຈະບໍ່ເກີດຂຶ້ນກັບຂ້າພະ
ເຈົ້າເລີຍ."
[25]ເມື່ອເປໂຕກັບໂຢຮັນເປັນພະຍານ ແລະ ປະກາດພຣະທັມຂອງອົງພຣະຜູ້ເປັນເຈົ້າແລ້ວ, ພວກທ່ານກໍກັບໄປນະຄອນ ເຢຣູຊາເລັມ,
ໃນຂະນະທີ່ໄປຕາມທາງພວກທ່ານໄດ້ປະກາດຂ່າວປະເສີດກັບຫລາຍໝູ່ບ້ານຂອງຊາວຊາມາເຣຍຫລາຍແຫ່ງ.
[26]ເທວະດາອົງໜຶ່ງຂອງອົງພຣະຜູ້ເປັນເຈົ້າກ່າວກັບຟີລິບວ່າ, "ຈົ່ງລຸກຂຶ້ນໄປທາງທິດໃຕ້ ຕາມເສັ້ນທາງທີ່ລົງຈາກນະຄອນ
ເຢຣູຊາເລັມໄປເຂດກາຊາ." (ເສັ້ນທາງນີ້ຢູ່ໃນຖິ່ນທຸລະກັນດານ.) ທ່ານກໍລຸກຂຶ້ນໄປ.[27]ນີ້ແຫລະ, ມີຊາຍຄົນໜຶ່ງມາຈາກເອທີໂອເປຍ, ຊຶ່ງເປັນຂັນ
ທີທີ່ເປັນຂ້າຣາຊການຂອງພະນາງ ກັນເດກາ, ພະຣາຊີນີແຫ່ງເອທີໂອເປຍ. ທ່ານເປັນນາຍຄັງຊັບສົມບັດທັງຫມົດຂອງພະຣາຊີນີອົງນັ້ນ.
ທ່ານມານະມັດສະການໃນນະຄອນ ເຢຣູຊາເລັມ.[28]ຂະນະທີ່ທ່ານກຳລັງເດີນທາງກັບ ແລະນັ່ງຢູ່ໃນລົດມ້າ, ແລະກຳລັງອ່ານໜັງສືເອຊາຢາຜູ້ທຳ
ນວາຍຢູ່.
[29]ພຣະວິນຍານບໍຣິສຸດເຈົ້າໄດ້ກ່າວກັບຟີລິບວ່າ, "ຈົ່ງເຂົ້າໄປ ແລະຢູ່ໃກ້ລົດມ້າຄັນນັ້ນ."[30]ຟີລິບຈຶ່ງແລ່ນໄປຫາທ່ານ, ແລະໄດ້ຍິນທ່ານກຳ
ລັງອ່ານໜັງສືເອຊາຢາ, ແລະຖາມວ່າ, "ທ່ານເຂົ້າໃຈສິ່ງທີ່ທ່ານກຳລັງອ່ານຢູ່ຫລືບໍ່?"[31]ຊາວເອທີໂອເປຍຄົນນັ້ນຕອບວ່າ, "ຂ້າພະ
ເຈົ້າຈະເຂົ້າໃຈໄດ້ແນວໃດ, ເວັ້ນເສຍແຕ່ວ່າມີຄົນແນະນຳຂ້າພະເຈົ້າ?" ທ່ານໄດ້ຂໍຮ້ອງໃຫ້ຟີລິບຂຶ້ນມາເທິງລົດມ້ານັ້ນແລະນັ່ງກັບທ່ານ.
[32]ພຣະຄຳພີຕອນທີ່ຊາວເອທີໂອເປຍອ່ານຢູ່ນັ້ນເປັນຂໍ້ຄວາມເຫລົ່ານີ້, "ທ່ານຖືກນຳຕົວເປັນຄືກັບແກະເພື່ອເອົາໄປຂ້າ,
ແລະເໝືອນລູກແກະທີ່ມິດງຽບຢູ່ຕໍ່ໜ້າຜູ້ຕັດຂົນຂອງມັນສັນໃດ, ທ່ານບໍ່ໄດ້ເປີດປາກຂອງທ່ານເລີຍສັນນັ້ນ.[33]ໃນເວລາທີ່ຖືກດູຖູກ
ທ່ານບໍ່ໄດ້ຮັບຄວາມຍຸດຕິທຳ. ຜູ້ໃດໜໍຈະເລົ່າເຖິງເຊື້ອສາຍຂອງທ່ານ? ເພາະວ່າຊີວິດຂອງທ່ານໄດ້ຖືກເອົາໄປຈາກແຜ່ນດິນໂລກ."
[34]ດັ່ງນັ້ນ ຂັນທີຈຶ່ງຖາມຟີລິບວ່າ, "ຂ້າພະເຈົ້າຂໍຖາມທ່ານ, ໃຜຄືຜູ້ທີ່ທຳນວາຍທີ່ກ່າວເຖິງ, ຕົວທ່ານເອງ,
ຫລືຜູ້ອື່ນ?"[35]ຟີລິບຈຶ່ງເລີ່ມເລົ່າເລື່ອງໃຫ້ຟັງ, ເລີ່ມຕົ້ນດ້ວຍຂໍ້ພຣະຄຳພີຕອນນີ້ໃນເອຊາຢາເພື່ອປະກາດເລື່ອງພຣະເຢຊູຄຣິດເຈົ້າກັບຂັນທີຄົນ
ນັ້ນ.
[36]ໃນຂະນະທີ່ພວກທ່ານເດີນທາງໄປຕາມເສັ້ນທາງ, ພວກທ່ານກໍມາຮອດສະຖານທີ່ມີນ້ຳ ຂັນທີຈຶ່ງກ່າວວ່າ, "ເບິ່ງແມ, ທີ່ນີ້ມີນ້ຳ,
ມີສິ່ງໃດທີ່ກີດຂວາງບໍ່ໃຫ້ຂ້າພະເຈົ້າຮັບບັບຕິສະມາ?"[37]"ຟີລິບຈຶ່ງຕອບວ່າ, "ຖ້າທ່ານເຊື່ອດ້ວຍສຸດໃຈ, ທ່ານກໍສາມາດຮັບບັບຕິສະມາໄດ້."
ຄົນເອທີໂອເປຍຈຶ່ງຕອບວ່າ, "ຂ້າພະເຈົ້າເຊື່ອວ່າພຣະເຢຊູຄຣິດເຈົ້າ ຊົງເປັນພຣະບຸດຂອງພຣະເຈົ້າ."[38]ດັ່ງນັ້ນ ຄົນເອທີໂອເປຍຄົນ
ນັ້ນຈຶ່ງໄດ້ສັ່ງໃຫ້ຢຸດລົດ. ພວກເຂົາກໍໄດ້ລົງໄປໃນນ້ຳ, ທັງຟີລິບກັບຂັນທີ, ແລະຟີລິບກໍໃຫ້ທ່ານຮັບບັບຕິສະມາ.
[39]ເມື່ອພວກທ່ານຂຶ້ນມາຈາກນ້ຳແລ້ວ, ພຣະວິນຍານບໍຣິສຸດເຈົ້າຂອງອົງພຣະຜູ້ເປັນເຈົ້າ ຊົງຮັບເອົາຟີລິບໄປ, ຂັນ
ທີຄົນນັ້ນກໍບໍ່ໄດ້ເຫັນທ່ານອີກເລີຍ, ລາວຈຶ່ງເດີນທາງຕໍ່ໄປດ້ວຍຄວາມຍິນດີ.[40]ແຕ່ວ່າຟີລິບປະກົດຕົວຢູ່ທີ່ເມືອງ ອາໂຊໂຕ ທ່ານຜ່ານເມືອງນັ້ນໄປ,
ແລະປະກາດຂ່າວປະເສີດທົ່ວທຸກເມືອງ ຈົນກວ່າທ່ານມາຮອດເມືອງ ກາຍຊາເຣຍ.

9 [1]ໂຊໂລ, ຍັງຂູ່ເຂັນວ່າຈະຂ້າບັນດາສາວົກຂອງອົງພຣະຜູ້ເປັນເຈົ້າ, ແລະໄປຫາມະຫາປະໂລຫິດ[2]ເພື່ອຂໍໜັງສືໄປທີ່ໂຮງທຳມະສາ
ລາຕ່າງໆໃນເມືອງ ດາມັສກັດ, ເພື່ອວ່າໃນເວລາທີ່ທ່ານເຫັນຜູ້ໃດທີ່ເປັນພວກທາງນັ້ນ, ບໍ່ວ່າຈະເປັນຊາຍຫລືຍິງ, ທ່ານຈະມັດແລ້ວພາມາ
ທີ່ນະຄອນ ເຢຣູຊາເລັມ.

[3]ໃນຂະນະທີ່ໂຊໂລກຳລັງເດີນທາງໄປເມືອງດາມັສກັດ, ທັນໃດນັ້ນ ກໍເກີດມີແສງສະຫວ່າງສ່ອງມາຈາກຟ້າສະຫວັນ; ມາອ້ອມຮອບຕົວທ່ານ,
[4]ທ່ານກໍລົ້ມລົງທີ່ພື້ນດິນ ແລະໄດ້ຍິນພຣະສຸລະສຽງກ່າວວ່າ, "ໂຊໂລ, ໂຊໂລເອີຍ, ເປັນຫຍັງທ່ານຈຶ່ງຂົ່ມເຫັງເຮົາ?"
[5]ໂຊໂລຈຶ່ງຕອບວ່າ, "ອົງພຣະຜູ້ເປັນເຈົ້າ, ພຣະອົງຊົງແມ່ນຜູ້ໃດ? "ອົງພຣະຜູ້ເປັນເຈົ້າກ່າວວ່າ, "ເຮົາແມ່ນພຣະເຢຊູຄຣິດເຈົ້າ
ຜູ້ທີ່ທ່ານຂົ່ມເຫັງນັ້ນແຫລະ;[6]ຈົ່ງລຸກຂຶ້ນເຖີດ, ແລະເຂົ້າໄປໃນເມືອງ, ແລ້ວຈະມີຄົນບອກທ່ານວ່າ
ທ່ານຄວນເຮັດແນວໃດ."[7]ພວກຄົນທີ່ເດີນທາງມາກັບໂຊໂລກໍຢືນຂຶ້ນບໍ່ສາມາດເວົ້າໄດ້, ໄດ້ຍິນແຕ່ພຣະສຸລະສຽງເທົ່ານັ້ນ, ແຕ່ບໍ່ເຫັນໃຜ.
[8]ໂຊໂລຈຶ່ງລຸກຂຶ້ນຈາກພື້ນ, ເມື່ອທ່ານມືນຕາຂຶ້ນ, ທ່ານກໍເບິ່ງບໍ່ເຫັນຫຍັງເລີຍ; ພວກເຂົາຈຶ່ງຈູງມືທ່ານ ແລະພາເຂົ້າໄປໃນເມືອງ ດາມັສກັດ.[9]ທ່ານ
ກໍເບິ່ງບໍ່ເຫັນເປັນເວລາສາມມື້, ແລະບໍ່ໄດ້ກິນອາຫານ ຫລື ດື່ມອັນໃດເລີຍ.
[10]ມີສາວົກຄົນໜຶ່ງທີ່ຢູ່ເມືອງ ດາມັສກັດ ຊື່ວ່າອານາເນຍ. ອົງພຣະຜູ້ເປັນເຈົ້າກ່າວກັບທ່ານຜ່ານນິມິດວ່າ, "ອານາເນຍເອີຍ!" ແລະທ່ານຕອບວ່າ,
"ຂ້າແດ່ອົງພຣະເຈົ້າ, ຂ້ານ້ອຍຢູ່ທີ່ນີ້."[11]ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບທ່ານວ່າ, "ຈົ່ງລຸກຂຶ້ນ, ແລ້ວໄປທາງຖະໜົນທີ່ເອີ້ນວ່າຖະໜົນຊື່, ແລະ
ໄປທີ່ເຮືອນຂອງຢູດາ ຖາມຫາຊາຍຄົນໜຶ່ງຈາກເມືອງ ຕາໂຊ ທີ່ຊື່ວ່າ ໂຊໂລ, ເພາະວ່າລາວກຳລັງອະທິຖານຢູ່.
[12]ແລະລາວໄດ້ເຫັນໃນນິມິດຂອງລາວວ່າ ມີຊາຍຄົນໜຶ່ງຊື່ວ່າ ອານາເນຍ ເຂົ້າມາແລະວາງມືໃສ່ໂຕລາວ, ເພື່ອທີ່ລາວຈະເບິ່ງເຫັນໄດ້ອີກ."
[13]ແຕ່ອານາເນຍຕອບວ່າ, "ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍໄດ້ຍິນຈາກຫລາຍຄົນກ່ຽວກັບຊາຍຄົນນີ້, ລາວໄດ້ໂຈມຕີຜູ້ບໍຣິສຸດຂອງພຣະອົງໃນນະ
ຄອນ ເຢຣູຊາເລັມ.[14]ລາວໄດ້ຮັບອຳນາດຈາກພວກຫົວຫນ້າປະໂລຫິດທີ່ຈະຈັບກຸມຜູ້ໃດກໍຕາມທີ່ນີ້ຜູ້ທີ່ອອກນາມຊື່ຂອງພຣະອົງ."[15]ອົງພຣະຜູ້
ເປັນເຈົ້າກ່າວກັບທ່ານວ່າ, "ຈົ່ງໄປເຖີດ, ເພາະເຂົາເປັນພາຊະນະທີ່ເຮົາເລືອກໄວ້, ທີ່ຈະນຳນາມຊື່ຂອງເຮົາໄປເຖິງບັນດາຄົນຕ່າງຊາດ ແລະ ບັນ
ດາກະສັດ ແລະ ລູກຫລານຂອງຊາວອິດສະຣາເອນ;[16]ເພາະວ່າເຮົາຈະໂຜດໃຫ້ລາວເຫັນວ່າລາວຕ້ອງທົນທຸກລຳບາກເທົ່າໃດເພື່ອ
ນາມຊື່ຂອງເຮົາ."
[17]ອານາເນຍຈຶ່ງອອກເດີນທາງໄປ, ແລະເຂົ້າໄປໃນເຮືອນນັ້ນ. ລາວວາງມືໃສ່ໂຕໂຊໂລ, ໂດຍກ່າວວ່າ, "ອ້າຍໂຊໂລ, ອົງພຣະຜູ້ເປັນເຈົ້າ,
ຜູ້ທີ່ປະກົດຕົວຕໍ່ທ່ານລະຫວ່າງເສັ້ນທາງທີ່ທ່ານມານັ້ນ, ໄດ້ສົ່ງຂ້າພະເຈົ້າມາເພື່ອເຮັດໃຫ້ທ່ານເບິ່ງເຫັນອີກຄັ້ງ ແລະ ໄດ້ຮັບ
ການເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ."[18]ໃນທັນໃດນັ້ນ ມີບາງສິ່ງຄືກັບເກັດຕົກລົງມາຈາກຕາຂອງໂຊໂລ, ແລ້ວທ່ານກໍສາມາດເບິ່ງເຫັນໄດ້;
ທ່ານຈຶ່ງລຸກຂຶ້ນແລະຮັບບັບຕິສະມາ;[19]ທ່ານກໍກິນອາຫານແລ້ວກໍແຂງແຮງຂຶ້ນ. ທ່ານອາໄສຢູ່ກັບພວກສາວົກຢູ່ເມືອງ ດາມັສກັດ ເປັນ
ເວລາຫລາຍມື້.
[20]ທ່ານໄດ້ປະກາດໃນທຳມະສາລາທັນທີວ່າ, ພຣະເຢຊູຄຣິດເຈົ້າຄືພຣະບຸດຂອງພຣະເຈົ້າ.[21]ທຸກຄົນທີ່ໄດ້ຍິນທ່ານກໍປະຫລາດໃຈ ແລະ
ເວົ້າກັນວ່າ, "ຜູ້ນີ້ບໍ່ແມ່ນບໍ ທີ່ໂຈມຕີຜູ້ຄົນໃນນະຄອນ ເຢຣູຊາເລັມຜູ້ທີ່ອອກນາມຊື່ນີ້? ແລະທ່ານມາທີ່ນີ້ເພື່ອຈະຈັບພວກນັ້ນ
ມັດແລ້ວສົ່ງໃຫ້ພວກຫົວໜ້າປະໂລຫິດ."[22]ແຕ່ໂຊໂລກໍຍິ່ງເຂັ້ມແຂງຫລາຍຂຶ້ນ, ແລະທ່ານເຮັດໃຫ້ພວກຢິວໃນຢູ່ເມືອງດາມັສກັດລຳບາກໃຈ
ໂດຍການພິສູດວ່າພຣະເຢຊູຄຣິດເຈົ້າ ຄືພຣະຄຣິດເຈົ້າ.
[23]ຫລາຍມື້ຕໍ່ມາ, ຊາວຢິວກໍວາງແຜນກັນຈະຂ້າໂຊໂລ.[24]ແຕ່ວ່າແຜນການຂອງພວກເຂົາຮູ້ໄປຮອດຫູຂອງໂຊໂລ. ພວກເຂົາເຝົ້າລໍ
ຖ້າຢູ່ທີ່ປະຕູເມືອງທັງກາງເວັນ ແລະ ກາງຄືນ ເພື່ອທີ່ຈະຂ້າທ່ານ.[25]ແຕ່ພວກສາວົກໄດ້ເອົາໂຊໂລນັ່ງຢູ່ໃນກະຕ່າ. ແລະໄດ້ຢ່ອນທ່ານລົງ
ໄປຈາກກຳແພງເມືອງໃນຕອນກາງຄືນ.
[26]ເມື່ອໂຊໂລມາຮອດນະຄອນ ເຢຣູຊາເລັມ, ທ່ານກໍພະຍາຍາມທີ່ຈະເຂົ້າຮ່ວມກັບພວກສາວົກ, ແຕ່ພວກເຂົາທຸກຄົນຢ້ານທ່ານ,
ບໍ່ເຊື່ອວ່າທ່ານເປັນສາວົກ.[27]ແຕ່ບາຣະນາບາໄດ້ພາທ່ານໄປຫາພວກອັກຄະສາວົກ, ແລະ ບາຣະນາບາໄດ້ບອກພວກເຂົາວ່າ
ໂຊໂລໄດ້ພົບກັບອົງພຣະຜູ້ເປັນເຈົ້າລະຫວ່າງທາງ ແລະອົງພຣະຜູ້ເປັນເຈົ້າໄດ້ກ່າວກັບທ່ານຢ່າງໃດ, ແລະໂຊ
ໂລໄດ້ປະກາດຢ່າງໃຈກ້າຫານໃນນາມຊື່ຂອງພຣະເຢຊູຄຣິດເຈົ້າໃນເມືອງດາມັສກັດ.
[28]ໂຊໂລຈຶ່ງເຂົ້ານອກອອກໃນຢູ່ກັບພວກອັກຄະສາວົກ ໃນນະຄອນ ເຢຣູຊາເລັມ. ທ່ານປະກາດນາມຊື່ຂອງອົງພຣະເຢຊູຄ
ຣິດເຈົ້າດ້ວຍໃຈກ້າຫານ.[29]ແລະໄດ້ໂຕ້ຖຽງກັບຊາວຢິວທີ່ເວົ້າພາສາກຣີກ; ແຕ່ພວກນັ້ນຍັງພະຍາຍາມທີ່ຈະຂ້າທ່ານ.[30]ເມື່ອພີ່ນ້ອງໄດ້ຮູ້ເລື່ອງນີ້,
ພວກເຂົາກໍພາທ່ານລົງໄປທີ່ເມືອງ ກາຍຊາເຣຍແລ້ວສົ່ງຕໍ່ໄປທີ່ເມືອງຕາໂຊ.
[31]ຫລັງຈາກນັ້ນ ຄຣິສຕະຈັກຕະຫລອດທົ່ວຢູດາຍ, ແຂວງ ຄາລີເລ, ແລະ ຊາມາເຣຍກໍມີຄວາມສະຫງົບສຸກ ແລະ ຈະເລີນເຕີບໃຫຍ່; ແລະ,
ດຳເນີນໄປໃນຄວາມຢຳເກງອົງພຣະຜູ້ເປັນເຈົ້າ, ແລະໄດ້ຮັບການໜູນໃຈຈາກພຣະວິນຍານບໍຣິສຸດເຈົ້າ, ຄຣິສຕະຈັກກໍມີຈຳ
ນວນສະມາຊິກເພີ່ມຂຶ້ນ.[32]ໃນເວລານັ້ນ, ຂະນະທີ່ເປໂຕເດີນທາງໄປທົ່ວທຸກຂົງເຂດ, ທ່ານກໍລົງໄປຫາຜູ້ທີ່ເຊື່ອທີ່ອາໄສຢູ່ໃນເມືອງລິດດາ.
[33]ເປໂຕໄດ້ພົບກັບຊາຍຄົນໜຶ່ງຊື່ວ່າ ໄອເນ, ລາວເປັນອຳມະພາດຕ້ອງຢູ່ໃນບ່ອນນອນເປັນເວລາແປດປີແລ້ວ,[34]ເປໂຕໄດ້ກ່າວກັບລາວວ່າ, "ໄອເນ,
ພຣະເຢຊູຄຣິດເຈົ້າຊົງປິ່ນປົວທ່ານໃຫ້ດີແລ້ວ. ຈົ່ງລຸກຂຶ້ນແລະເກັບມ້ຽນບ່ອນນອນຂອງທ່ານເຖີດ," ລາວກໍລຸກຂຶ້ນໃນທັນທີ.
[35]ເມື່ອທຸກຄົນທີ່ອາໄສຢູ່ໃນເມືອງ ລິດດາ ແລະ ໃນທົ່ງພຽງຊາໂຣນໄດ້ເຫັນຊາຍຄົນນັ້ນ, ແລ້ວພວກເຂົາກໍກັບໃຈມາຫາອົງພຣະຜູ້ເປັນເຈົ້າ.
[36]ມີສາວົກຄົນໜຶ່ງຢູ່ເມືອງ ຢົບປາຊື່ວ່າຕາບີທາ, ຊຶ່ງມີຄວາມຫມາຍວ່າ "ໂດຣະກາ." ຜູ້ຍິງຄົນນີ້ໄດ້ເຮັດວຽກທີ່ດີໄວ້ຫລວງຫລາຍ ແລະ ມີຄວາມ
ເມດຕາຕໍ່ຄົນທຸກຍາກ.[37]ໃນເວລານັ້ນ ນາງເຈັບປ່ວຍ ແລະ ຕາຍ; ເມື່ອພວກເຂົາອາບນ້ຳສົບຂອງນາງແລ້ວ, ກໍເອົາໄປວາງໄວ້ໃນຫ້ອງຊັ້ນເທິງ.
[38]ເນື່ອງຈາກເມືອງລິດດາຢູ່ໃກ້ກັບເມືອງຢົບປາ ແລະພວກສາວົກໄດ້ຍິນວ່າເປໂຕຢູ່ທີ່ນັ້ນ, ຈຶ່ງສົ່ງຊາຍສອງຄົນໄປຫາທ່ານ, ແລະໄດ້ຂໍຮ້ອງທ່ານ
ວ່າ, "ຂໍໃຫ້ທ່ານມາກັບພວກຂ້ານ້ອຍໂດຍໄວເຖີດ."[39]ເປໂຕກໍລຸກຂຶ້ນໄປກັບພວກເຂົາ. ເມື່ອທ່ານມາຮອດ,
ພວກເຂົາກໍພາທ່ານຂຶ້ນໄປທີ່ຫ້ອງຊັ້ນເທິງ, ພວກແມ່ໝ້າຍທຸກຄົນພາກັນຢືນຮ້ອງໄຫ້ຢູ່ຂ້າງໆທ່ານ, ແລະຊີ້ໃຫ້
ທ່ານເບິ່ງເສື້ອຄຸມແລະເສື້ອຜ້າຕ່າງໆທີ່ໂດຣະກາໄດ້ເຮັດໄວ້ ໃນຂະນະທີ່ນາງຍັງມີຊີວິດຢູ່ກັບພວກເຂົາ.
[40]ເປໂຕຈຶ່ງໃຫ້ພວກເຂົາອອກໄປທາງນອກ, ແລ້ວຄຸເຂົ່າລົງ, ອະທິຖານ; ທ່ານປິ່ນມາຫາຊາກສົບນັ້ນ, ແລະກ່າວວ່າ, "ຕາບີທາເອີຍ,
ຈົ່ງລຸກຂຶ້ນເຖີດ." ນາງກໍມືນຕາຂຶ້ນ, ແລະເມື່ອນາງເຫັນເປໂຕຈຶ່ງລຸກຂຶ້ນນັ່ງ.[41]ເປໂຕໄດ້ຈັບມືຂອງນາງເພື່ອດຶງນາງຂຶ້ນ; ແລະເມື່ອທ່ານເອີ້ນຜູ້ທີ່ເຊື່ອ

ແລະ ພວກແມ່ໝ້າຍເຂົ້າມາ, ທ່ານກໍມອບຍິງທີ່ມີຊີວິດໃຫ້ກັບພວກເຂົາ.[42]ເລື່ອງນີ້ແຜ່ຂະຫຍາຍໄປທົ່ວເມືອງ ຢົບປາ, ແລະຫລາຍຄົນກໍພາກັນ
ມາເຊື່ອໃນອົງພຣະຜູ້ເປັນເຈົ້າ.[43]ເຫດການນີ້ເກີດຂຶ້ນໃນຂະນະທີ່ເປໂຕອາໄສຢູ່ໃນເມືອງ ຢົບປາເປັນເວລາຫລາຍມື້ກັບຊາຍຄົນໜຶ່ງທີ່ມີ
ຊື່ວ່າຊີໂມນ, ທີ່ເປັນຊ່າງຟອກຫນັງ.


generated on Tue Jun 17 19:01:42 2025

# 10

1ມີຊາຍຄົນໜຶ່ງຢູ່ໃນເມືອງ ກາຍຊາເຣຍ, ຊື່ໂກເນລີໂອ, ເປັນນາຍຮ້ອຍໃນກອງທັບທະຫານ ທີ່ເອີ້ນວ່າກອງທະຫານ ອີຕາລີ.
2ທ່ານແລະຄອບຄົວຂອງທ່ານມີຄວາມຢຳເກງ ແລະນະມັດສະການພຣະເຈົ້າ; ທ່ານໄດ້ບໍລິຈາກເປັນເງິນຈຳນວນຫລວງຫລາຍໃຫ້ຊາວຢິວ,
ແລະອະທິຖານຫາພຣະເຈົ້າຢູ່ສະເໝີ.

3ເວລາປະມານບ່າຍສາມໂມງ, ນາຍຮ້ອຍຄົນນັ້ນໄດ້ເຫັນນິມິດຢ່າງຊັດເຈນວ່າ ເທວະດາອົງໜຶ່ງຂອງພຣະເຈົ້າມາຫາທ່ານ. ເທວະດາອົງນັ້ນກ່າວ
ແກ່ທ່ານວ່າ, "ໂກເນລີໂອ!"4ໂກເນລີໂອຕັ້ງໃຈແນມເບິ່ງທີ່ເທວະດາດ້ວຍຄວາມຕົກໃຈຫລາຍ ແລະ ກ່າວວ່າ, "ນີ້ແມ່ນເລື່ອງໃດນໍ ພຣະອົງເຈົ້າ
ເອີຍ?" ເທວະດາອົງນັ້ນກ່າວແກ່ທ່ານວ່າ, "ຄຳອະທິຖານ ແລະການບໍລິຈາກໃຫ້ແກ່ຄົນທຸກຍາກຂອງທ່ານເປັນເຄື່ອງບູຊາຂຶ້ນໄປເຖິງທີ່ປະທັບຂອງ
ພຣະເຈົ້າ.5ບັດນີ້ ຈົ່ງໃຊ້ຄົນໄປທີ່ເມືອງຢົບປາ ແລະ ພາຊາຍຄົນໜຶ່ງທີ່ຊື່ວ່າ ຊີໂມນ ທີ່ເອີ້ນວ່າເປໂຕມາ.6ທ່ານພັກຢູ່ກັບຊ່າງຟອກໜັງທີ່ຊື່ຊີໂມນ, ທີ່
ບ້ານຂອງເຂົາທີ່ແຄມທະເລ."
7ເມື່ອເທວະດາທີ່ເວົ້າກັບທ່ານຈາກໄປແລ້ວ, ທ່ານກໍເອີ້ນຄົນຮັບໃຊ້ໃນຄົວເຮືອນສອງຄົນ,
ແລະທະຫານຄົນໜຶ່ງທີ່ນະມັດສະການພຣະເຈົ້າຈາກກອງທະຫານທີ່ຮັບໃຊ້ທ່ານເຊັ່ນກັນ.8ໂກເນລີໂອເລົ່າເຫດການທັງໝົດໃຫ້ພວກເຂົາຟັງ
ແລະ ໃຊ້ພວກເຂົາໄປທີ່ເມືອງ ຢົບປາ.
9ມື້ຕໍ່ມາເວລາປະມານທ່ຽງ, ຂະນະທີ່ພວກເຂົາເດີນທາງໃກ້ຈະຮອດເມືອງນັ້ນ, ເປໂຕຂຶ້ນໄປເທິງຫລັງຄາເຮືອນເພື່ອອະທິຖານ.10ທ່ານເລີ່ມຫິວ
ແລະ ຕ້ອງການກິນອາຫານ, ແຕ່ໃນຂະນະທີ່ຜູ້ຄົນກຳລັງແຕ່ງກິນຢູ່ນັ້ນ, ທ່ານກໍໄດ້ຮັບນິມິດ,11ແລະທ່ານເຫັນທ້ອງຟ້າເປີດອອກ ແລະ
ມີພາຊະນະໃສ່ເຄື່ອງ, ເລື່ອນຕ່ຳລົງມາເບິ່ງຄືກັບຜ້າແຜ່ນໃຫຍ່ລົງສູ່ພື້ນໂລກ, ມີເຊືອກສີ່ແຈຢ່ອນລົງມາ.12ໃນນັ້ນມີສັດສີ່ຕີນທຸກຊະນິດ
ແລະສິ່ງທີ່ເລືອຄານຢູ່ພື້ນດິນ, ແລະນົກໃນຟ້າອາກາດ.
13ແລ້ວມີພຣະສຸລະສຽງກ່າວກັບທ່ານວ່າ: "ເປໂຕ, ຈົ່ງລຸກຂຶ້ນ, ຈົ່ງຂ້າ ແລະ ກິນເຖີດ."14ແຕ່ເປໂຕກ່າວວ່າ, "ຂໍຢ່າໃຫ້ເປັນຢ່າງນັ້ນເລີຍ,
ອົງພຣະຜູ້ເປັນເຈົ້າ; ເພາະວ່າຂ້າພະອົງບໍ່ເຄີຍກິນອາຫານສິ່ງໃດທີ່ບໍ່ສະອາດ ແລະ ບໍ່ບໍຣິສຸດ."15ແຕ່ມີພະສຸລະສຽງນັ້ນມາເຖິງທ່ານອີກ
ເປັນເທື່ອທີສອງວ່າ: "ສິ່ງທີ່ພຣະເຈົ້າໄດ້ຊົງຊຳລະແລ້ວ, ຢ່າຖືວ່າເປັນມົນທິນ."16ເຫດການນີ້ເກີດຂຶ້ນເຖິງສາມຄັ້ງ; ແລ້ວພາຊະນະໃສ່ເຄື່ອງ
ນັ້ນກໍຖືກນຳຂຶ້ນໄປເທິງທ້ອງຟ້າທັນທີ.
17ຂະນະທີ່ເປໂຕຮູ້ສຶກສັບສົນຫລາຍກ່ຽວກັບນິມິດທີ່ທ່ານເຫັນວ່າມີຄວາມໝາຍແນວໃດ, ນີ້ແຫລະ, ພວກຄົນທີ່ໂກເນລີໂອໃຊ້ມາ
ກໍຢືນຢູ່ໜ້າປະຕູຮົ້ວ, ຫລັງຈາກທີ່ພວກເຂົາໄດ້ຖາມຫາທາງທີ່ຈະມາເຮືອນນັ້ນ.18ພວກເຂົາຮ້ອງ ແລະ ຖາມວ່າຊີໂມນ, ທີ່ເອີ້ນວ່າເປໂຕ, ພັກຢູ່ທີ່ນີ້
ຫລືບໍ່.
19ຂະນະທີ່ເປໂຕຍັງຄິດເຖິງກ່ຽວກັບນິມິດນັ້ນ, ພຣະວິນຍານບໍຣິສຸດເຈົ້າໄດ້ກ່າວກັບທ່ານວ່າ, "ເບິ່ງເຖີດ, ມີຊາຍສາມຄົນກຳລັງມາຫາທ່ານ.
20ຈົ່ງລຸກຂຶ້ນ ແລະ ລົງໄປກັບພວກເຂົາເຖີດ. ຢ່າຊັກຊ້າ ເພາະວ່າເຮົາໃຊ້ພວກເຂົາມາ."21ເປໂຕຈຶ່ງລົງໄປຫາຄົນເຫລົ່ານັ້ນ ແລະເວົ້າວ່າ, "ຂ້າພະ
ເຈົ້າແມ່ນຄົນທີ່ທ່ານກຳລັງຊອກຫາ. ພວກທ່ານມາເຮັດຫຍັງ?"
22ພວກເຂົາກ່າວວ່າ, "ນາຍຮ້ອຍທີ່ຊື່ວ່າ ໂກເນລີໂອແມ່ນຜູ້ຊອບທຳ ແລະນະມັດສະການພຣະເຈົ້າ, ແລະເປັນທີ່ຮູ້ຈັກກັນດີໃນບັນດາຊົນຊາດຢິວ,
ເທວະດາບໍຣິສຸດອົງໜຶ່ງຂອງພຣະເຈົ້າໄດ້ກ່າວແກ່ໂກເນລີໂອໃຫ້ມາເຊີນທ່ານໄປທີ່ເຮືອນ. ເພື່ອຈະສາມາດຟັງຖ້ອຍຄຳຂອງທ່ານ.
23ເປໂຕຈຶ່ງເຊີນພວກເຂົາເຂົ້າມາທາງໃນ ແລະພັກຢູ່ກັບທ່ານ. ມື້ຕໍ່ມາເປໂຕກໍລຸກຂຶ້ນ ແລະໄປກັບພວກເຂົາ, ພີ່ນ້ອງບາງຄົນຈາກເມືອງຢົບປາ
ກໍໄປກັບທ່ານດ້ວຍ.
24ມື້ຕໍ່ມາ ພວກເຂົາໄດ້ມາຮອດເມືອງ ກາຍຊາເຣຍ. ໂກເນລີໂອກຳລັງຄອຍຖ້າພວກເຂົາຢູ່; ທ່ານໄດ້ເອີ້ນບັນດາຍາດພີ່ນ້ອງ ແລະ
ໝູ່ສະໜິດຂອງທ່ານມາເຕົ້າໂຮມກັນ.
25ເມື່ອເປໂຕມາຮອດ, ໂກເນລີໂອໄດ້ເຫັນທ່ານ ແລະ ກົ້ມລົງຂາບຢູ່ທີ່ຕີນຂອງທ່ານເພື່ອທີ່ຈະນະມັດສະການທ່ານ.26ແຕ່ເປໂຕໄດ້ປະ
ຄອງໂກເນລີໂອໃຫ້ຢືນຂຶ້ນ, ແລະກ່າວວ່າ, "ຈົ່ງຢືນຂຶ້ນເຖີດ! ຂ້າພະເຈົ້າກໍເປັນມະນຸດເຊັ່ນກັນ."
27ໃນຂະນະທີ່ເປໂຕກຳລັງສົນທະນາກັບໂກເນລີໂອ, ເປໂຕກໍເຂົ້າມາທາງໃນ ແລະ ເຫັນຄົນຫລວງຫລາຍມາປະຊຸມຮ່ວມກັນ.28ທ່ານຈຶ່ງ
ໄດ້ກ່າວກັບພວກເຂົາວ່າ, "ພວກທ່ານເອງກໍຮູ້ຢູ່ວ່າ ການທີ່ຄົນຢິວຈະສົມທົບ ຫລື ຢ້ຽມຢາມຄົນຕ່າງຊາດຖືວ່າເປັນສິ່ງທີ່ຕ້ອງຫ້າມ.
ແຕ່ພຣະເຈົ້າຊົງໂຜດໃຫ້ຂ້າພະເຈົ້າເຫັນວ່າ ບໍ່ຄວນເອີ້ນວ່າຄົນໃດຄົນໜຶ່ງບໍ່ສະອາດ ຫລື ບໍ່ບໍຣິສຸດ.29ນັ້ນແມ່ນເຫດຜົນທີ່ຂ້າພະ
ເຈົ້າມາໂດຍບໍ່ຂັດຂ້ອງ, ເມື່ອພວກທ່ານໃຊ້ຄົນໄປເຊີນຂ້າພະເຈົ້າ. ດັ່ງນັ້ນ ຂ້າພະເຈົ້າຂໍຖາມເຫດຜົນໃດທີ່ທ່ານເຊີນຂ້າພະເຈົ້າມາ?"
30ໂກເນລີໂອຈຶ່ງຕອບວ່າ, "ເມື່ອສີ່ມື້ທີ່ຜ່ານມາໃນເວລາປະມານນີ້, ຕອນບ່າຍສາມໂມງ ຂ້າພະເຈົ້າກຳລັງອະທິຖານຢູ່ໃນເຮືອນ; ແລະໄດ້ເຫັນ,
ຊາຍຄົນໜຶ່ງນຸ່ງຊຸດສີຂາວທີ່ງົດງາມຢືນຢູ່ຕໍ່ໜ້າຂ້າພະເຈົ້າ.31ທ່ານຜູ້ນັ້ນກ່າວວ່າ, 'ໂກເນລີໂອ, ພຣະເຈົ້າຊົງໄດ້ຍິນຄຳອະທິຖານຂອງທ່ານແລ້ວ,
ແລະ ການໃຫ້ບໍລິຈາກແກ່ຄົນທຸກຍາກກໍເຮັດໃຫ້ພຣະເຈົ້າລະລຶກເຖິງທ່ານ.32ເພາະເຫດນັ້ນ ຈົ່ງໃຊ້ຄົນໄປທີ່ເມືອງ ຢົບປາ, ແລະ
ເຊີນຊາຍຄົນໜຶ່ງຊື່ວ່າຊີໂມນທີ່ເອີ້ນວ່າເປໂຕມາຫາທ່ານ, ທ່ານອາໄສຢູ່ໃນເຮືອນຂອງຊ່າງຟອກຫນັງທີ່ຊື່ວ່າ ຊີໂມນ ຢູ່ແຄມຝັ່ງທະເລ.' "33ດັ່ງນັ້ນ
ຂ້າພະເຈົ້າໄດ້ໃຊ້ຄົນມາຫາທ່ານ. ທ່ານເປັນຄົນໃຈດີທີ່ໄດ້ມາ. ບັດນີ້, ພວກເຮົາທຸກຄົນຢູ່ທີ່ນີ້ໃນສາຍຕາຂອງພຣະເຈົ້າ,
ເພື່ອຟັງທຸກສິ່ງທີ່ທ່ານໄດ້ຮັບຄຳສັ່ງຈາກອົງພຣະຜູ້ເປັນເຈົ້າໃຫ້ເວົ້າ." (ເມື່ອທ່ານມາເຖິງທ່ານຈະບອກ).
34ແລ້ວເປໂຕກໍເລີ່ມກ່າວວ່າ, "ຂ້າພະເຈົ້າເຂົ້າໃຈ, ຢ່າງແທ້ຈິງວ່າ ພຣະເຈົ້າບໍ່ເຂົ້າຂ້າງຜູ້ໃດເລີຍ.35ແຕ່ວ່າ, ທຸກຄົນບໍ່ວ່າຊົນຊາດໃດກໍຕາມທີ່ຢຳ
ເກງພຣະເຈົ້າ ແລະ ປະພຶດຄວາມຊອບທຳ ພຣະອົງກໍຊົງຍອມຮັບຜູ້ນັ້ນ.
36ທ່ານຮູ້ວ່າຖ້ອຍຄຳທີ່ພຣະອົງມອບໃຫ້ກັບຄົນອິດຊະຣາເອັນ, ເມື່ອພຣະອົງຊົງປະກາດຂ່າວປະເສີດເລື່ອງສັນຕິສຸກໂດຍພຣະເຢຊູຄຣິດເຈົ້າ, ຜູ້
ຊົງເປັນອົງພຣະຜູ້ເປັນເຈົ້າຂອງທຸກຄົນ—37ພວກທ່ານເອງກໍຮູ້ເຖິງເຫດການທີ່ເກີດຂຶ້ນ, ທົ່ວແຂວງຢູດາຍ, ເລີ່ມຕົ້ນໃນແຂວງກາລີເລ, ຫລັງຈາກທີ່
ໂຢຮັນໄດ້ປະກາດການຮັບບັບຕິສະມານັ້ນ;38ເຫດການຕ່າງໆ ທີ່ກ່ຽວກັບພຣະເຢຊູຄຣິດເຈົ້າແຫ່ງນາຊາເຣັດ, ແລະການທີ່ພຣະເຈົ້າຊົງເຈີມພຣະ
ອົງດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ ດ້ວຍຣິດເດດ. ພຣະອົງສະເດັດອອກໄປເຮັດຄວາມດີ ແລະ ປິ່ນປົວທຸກຄົນຜູ້ທີ່ຖືກຜີຮ້າຍບຽດບຽນ,
ເພາະວ່າພຣະເຈົ້າຊົງສະຖິດກັບພຣະອົງ.
39ຂ້າພະເຈົ້າຄືຜູ້ທີ່ເປັນພະຍານຂອງທຸກສິ່ງທີ່ພຣະອົງຊົງເຮັດ, ທັງໃນແຂວງຢູດາຍ ແລະ ໃນນະຄອນ ເຢຣູຊາເລັມ. ພຣະເຢຊູເຈົ້າອົງນີ້ແຫລະ ທີ່
ພວກເຂົາຂ້າ ແລະ ແຂວນພຣະອົງໄວ້ເທິງຕົ້ນໄມ້,40ແຕ່ພຣະອົງນີ້ແຫລະ ທີ່ພຣະເຈົ້າຊົງໂຜດໃຫ້ເປັນຄືນມາຈາກຄວາມຕາຍໃນວັນທີສາມ ແລະ


generated on Tue Jun 17 19:01:42 2025

ຊົງໃຫ້ພຣະອົງປາກົດແຈ້ງ,[41]ບໍ່ໄດ້ຊົງສະແດງແກ່ທຸກຄົນ, ແຕ່ສະແດງຕໍ່ຜູ້ທີ່ເປັນພະຍານທີ່ພຣະເຈົ້າຊົງເລືອກໄວ້ລ່ວງໜ້າຄື—ພວກເຮົາເອງທີ່ໄດ້ຮັບກິນ ແລະ ດື່ມກັບພຣະອົງ ຫລັງຈາກທີ່ພຣະອົງຊົງເປັນຄືນມາຈາກຄວາມຕາຍແລ້ວ.
[42]ພຣະອົງໄດ້ສັ່ງພວກເຮົາໃຫ້ອອກໄປປະກາດກັບປະຊາຊົນ ແລະ ເປັນພະຍານວ່າ ນີ້ຄືຜູ້ທີ່ພຣະເຈົ້າຊົງເລືອກໃຫ້
ເປັນຜູ້ຈະຕັດສິນທັງຄົນເປັນແລະຄົນຕາຍ.[43]ບັນດາຜູ້ທຳນວາຍໄດ້ເປັນພະຍານເຖິງພຣະອົງ, ເພື່ອວ່າທຸກຄົນທີ່ເຊື່ອໃນພຣະອົງຈະໄດ້ຮັບການຍົກໂທດບາບໂດຍທາງນາມຊື່ຂອງພຣະອົງ."
[44]ຂະນະທີ່ເປໂຕຍັງກ່າວກ່ຽວກັບເລື່ອງນີ້ຢູ່, ພຣະວິນຍານບໍຣິສຸດເຈົ້າໄດ້ສະເດັດລົງມາສະຖິດກັບທຸກຄົນ ທີ່ຟັງຖ້ອຍຄຳຂອງທ່ານຢູ່.[45]ບັນດາຄົນໃນກຸ່ມຜູ້ທີ່ເຊື່ອ—ທີ່ເຂົ້າຮັບພິທີຕັດທຸກຄົນທີ່ມາກັບເປໂຕ—ກໍພາກັນປະຫລາດໃຈ, ເພາະວ່າຂອງປະທານແຫ່ງພຣະວິນຍານບໍຣິສຸດເຈົ້າໄດ້ເທລົງມາເທິງຄົນຕ່າງຊາດດ້ວຍ.
[46]ພວກເຂົາໄດ້ຍິນພວກຕ່າງຊາດເຫລົ່ານີ້ເວົ້າພາສາຕ່າງໆ ແລະ ສັນລະເສີນພຣະເຈົ້າ. ເປໂຕຈຶ່ງກ່າວວ່າ,
[47]"ໃຜຈະຫ້າມຄົນເຫລົ່ານີ້ທີ່ໄດ້ຮັບພຣະວິນຍານບໍຣິສຸດເຈົ້າ, ເຊັ່ນດຽວກັບພວກຂ້າພະ
ເຈົ້າຈາກການບັບຕິສະມາດ້ວຍນ້າ?"[48]ແລ້ວເປໂຕຈຶ່ງສັ່ງໃຫ້ພວກເຂົາຮັບບັບຕິສະມາໃນນາມຊື່ຂອງພຣະເຢຊູຄຣິດເຈົ້າ. ຫລັງຈາກນັ້ນ ພວກເຂົາຈຶ່ງຂໍໃຫ້ເປໂຕຢູ່ກັບພວກເຂົາເປັນເວລາຫລາຍມື້.

 generated on Tue Jun 17 19:01:42 2025

11 [1]ພວກອັກຄະສາວົກ ແລະ ພີ່ນ້ອງທີ່ອາໄສຢູ່ໃນແຂວງ ຢູດາຍໄດ້ຍິນຂ່າວວ່າຄົນຕ່າງຊາດຍອມຮັບເອົາພຣະທັມຂອງພຣະເຈົ້າ.
[2]ເມື່ອເປໂຕຂຶ້ນຮອດນະຄອນ ເຢຣູຊາເລັມແລ້ວ, ປະຊາຊົນທີ່ເຂົ້າໃນພິທີຕັດກໍຕິຕຽນເພິ່ນ;[3]ພວກເຂົາກ່າວວ່າ,
"ທ່ານຄົບຫາກັບຜູ້ທີ່ບໍ່ໄດ້ຮັບພິທີຕັດ ແລະ ຮັບປະທານອາຫານຮ່ວມກັບພວກເຂົາ!"

[4]ເປໂຕຈຶ່ງເລີ່ມຕົ້ນອະທິບາຍເລື່ອງນັ້ນໃຫ້ພວກເຂົາຟັງໂດຍລະອຽດ; ວ່າ,[5]ຂະນະທີ່ຂ້າພະເຈົ້າກຳລັງອະທິຖານຢູ່ເມືອງ ຢົບປາ,
ຂ້າພະເຈົ້າໄດ້ເຫັນໃນນິມິດວ່າ ມີພາຊະນະໃສ່ເຄື່ອງເລື່ອນລົງມາ, ມີລັກສະນະເປັນແຜ່ນຂະໜາດໃຫຍ່ ຢ່ອນລົງມາຈາກທ້ອງຟ້າໂດຍມີທັງສີ່
ມຸມໄດ້ຢ່ອນລົງມາຫາຂ້າພະເຈົ້າ.[6]ເມື່ອຂ້າພະເຈົ້າແນມເບິ່ງ ແລະ ຄິດກ່ຽວກັບສິ່ງນີ້. ຂ້າພະເຈົ້າໄດ້ເຫັນສັດບົກສີ່ຕີນ, ສັດປ່າ, ສັດເລືອຄານ,
ແລະນົກໃນອາກາດ.
[7]ແລ້ວຂ້າພະເຈົ້າໄດ້ຍິນພຣະສຸລະສຽງກ່າວກັບຂ້າພະເຈົ້າວ່າ, "ເປໂຕ, ຈົ່ງລຸກຂຶ້ນຂ້າກິນເຖີດ!"[8]ຂ້າພະເຈົ້າເວົ້າວ່າ, "ຢ່າໃຫ້ເປັນຢ່າງນັ້ນເລີຍ
ອົງພຣະຜູ້ເປັນເຈົ້າ, ເພາະວ່າສິ່ງທີ່ບໍ່ສະອາດ ຫລື ບໍ່ບໍຣິສຸດບໍ່ເຄີຍເຂົ້າປາກຂ້າພະອົງເລີຍ."[9]ແຕ່ພຣະສຸລະສຽງນັ້ນກໍຕອບຈາກ
ຟ້າອີກເທື່ອໜຶ່ງວ່າ, "ສິ່ງທີ່ພຣະເຈົ້າປະກາດຖືກຊຳລະແລ້ວ ຢ່າເອີ້ນວ່າມັນບໍ່ສະອາດ."[10]ສິ່ງນີ້ໄດ້ເກີດຂຶ້ນສາມເທື່ອ
ແລ້ວທຸກຢ່າງກໍຖືກຮັບຂຶ້ນໄປເທິງຟ້າອີກເທື່ອໜຶ່ງ.
[11]ໃນທັນໃດນັ້ນ ມີຊາຍສາມຄົນມາຢືນຢູ່ທີ່ໜ້າປະຕູເຮືອນທີ່ຂ້າພະເຈົ້າພັກອາໄສຢູ່; ພວກເຂົາຖືກສົ່ງມາຈາກເມືອງ ກາຍຊາເຣຍມາຫາຂ້າພະ
ເຈົ້າ.[12]ພຣະວິນຍານຈຶ່ງສັ່ງໃຫ້ຂ້າພະເຈົ້າໄປກັບພວກເຂົາ, ແລ້ວຂ້າພະເຈົ້າກໍນຳພວກເຂົາໄປໂດຍບໍ່ລັງເລ. ພີ່ນ້ອງທັງຫົກຄົນນີ້ໄປກັບຂ້າພະເຈົ້າ,
ແລະຂ້າພະເຈົ້າກໍເຂົ້າໄປໃນເຮືອນຂອງຊາຍຄົນນັ້ນ.[13]ຊາຍຄົນນັ້ນເລົ່າໃຫ້ຟັງວ່າ ທ່ານໄດ້ເຫັນເທວະດາຢືນຢູ່ໃນເຮືອນຂອງທ່ານຢ່າງໃດ ແລະ
ກ່າວກັບທ່ານວ່າ, "ຈົ່ງໃຊ້ຄົນໄປທີ່ເມືອງ ຢົບປາ ແລະ ເຊີນຊີໂມນທີ່ເອີ້ນກັນວ່າເປໂຕມາ.[14]ລາວກ່າວຖ້ອຍຄຳກັບພວກທ່ານ ເພື່ອທີ່ພວກທ່ານຈະ
ໄດ້ຮັບຄວາມພົ້ນ—ທັງທ່ານແລະຄອບຄົວຂອງທ່ານ."
[15]ໃນຂະນະທີ່ຂ້າພະເຈົ້າເລີ່ມຕົ້ນເວົ້າ, ພຣະວິນຍານບໍຣິສຸດເຈົ້າກໍໄດ້ສະເດັດລົງມາສະຖິດກັບພວກເຂົາ, ຊຶ່ງຄືກັນກັບພວກເຮົາໃນຕອນເລີ່ມຕົ້ນ.
[16]ຂ້າພະເຈົ້າຈຶ່ງລະລຶກເຖິງຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າ, ທີ່ພຣະອົງກ່າວວ່າ, "ໂຢຮັນໃຫ້ບັບຕິສະມາດ້ວຍນ້ຳ;
ແຕ່ພວກທ່ານຈະໄດ້ຮັບບັບຕິສະມາໃນພຣະວິນຍານບໍຣິສຸດເຈົ້າ."
[17]ແລ້ວຖ້າພຣະເຈົ້າໄດ້ມອບຂອງປະທານຢ່າງດຽວແກ່ພວກເຂົາຄືກັນກັບທີ່ພຣະອົງໄດ້ມອບໃຫ້ແກ່ພວກເຮົາ
ເມື່ອພວກເຮົາເຊື່ອໃນອົງພຣະເຢຊູຄຣິດເຈົ້າ, ແລ້ວຂ້າພະເຈົ້າແມ່ນໃຜ, ທີ່ຈະຕໍ່ຕ້ານພຣະເຈົ້າໄດ້?”[18]ເມື່ອພວກເຂົາໄດ້ຍິນເຊັ່ນນີ້,
ພວກເຂົາກໍບໍ່ມີຫຍັງທີ່ຈະກ່າວໄດ້, ພວກເຂົາຈຶ່ງສັນລະເສີນພຣະເຈົ້າວ່າ, "ພຣະເຈົ້າຊົງໄດ້ມອບການກັບໃຈໃຫມ່ ເພື່ອໃຫ້ມີຊີວິດແກ່
ຄົນຕ່າງຊາດດ້ວຍ."
[19]ບັນດາຄົນທີ່ກະຈັດກະຈາຍໄປ ເນື່ອງຈາກການຂົ່ມເຫັງທີ່ເລີ່ມຕົ້ນດ້ວຍການເສຍຊີວິດຂອງ ຊະເຕຟາໂນ ກໍໄດ້ແຜ່ລາມໄປເຖິງເມືອງ ໂຟນີເຊຍ,
ເກາະໄຊປຣັດ, ແລະເມືອງ ອັນຕີໂອເຂຍ, ແຕ່ພວກເຂົາກ່າວຖ້ອຍຄຳກ່ຽວກັບພຣະເຢຊູຄຣິດເຈົ້າກັບຊາວຢິວເທົ່ານັ້ນ.
[20]ບາງຄົນໃນພວກເຂົາແມ່ນ, ຊາວເກາະໄຊປຣັດ, ແລະ ຊາວກີເຣເນມາທີ່ເມືອງ ອັນຕີໂອເຂຍ ກໍໄດ້ບອກຂ່າວປະເສີດກ່ຽວກັບອົງພຣະເຢຊູຄຣິດ
ເຈົ້າ. ກັບພວກເຂົາເປັນພາສາກຣີກດ້ວຍ,[21]ແລະພຣະຫັດຂອງອົງພຣະຜູ້ເປັນເຈົ້າຢູ່ກັບພວກເຂົາ; ຄົນຈຳນວນຫລາຍໄດ້ເຊື່ອ ແລະ
ກັບມາຫາອົງພຣະຜູ້ເປັນເຈົ້າ.
[22]ເລື່ອງນີ້ໄດ້ຍິນມາຮອດຫູຂອງຄຣິສຕະຈັກໃນນະຄອນ ເຢຣູຊາເລັມ, ພວກເຂົາຈຶ່ງສົ່ງບາຣະນາບາໄປທີ່ເມືອງອັນຕີໂອເຂຍ.[23]ເມື່ອທ່ານມາຮອດ
ແລະ ເຫັນຂອງປະທານຈາກພຣະເຈົ້າ, ທ່ານກໍຍິນດີ; ແລະທ່ານໄດ້ໜູນໃຈພວກເຂົາທຸກຄົນໃຫ້ໝັ້ນ
ຄົງໃນອົງພຣະຜູ້ເປັນເຈົ້າດ້ວຍສຸດຈິດສຸດໃຈ.[24]ເພາະວ່າບາຣະນາບາເປັນຄົນດີ ແລະ ເຕັມລົ້ນດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະ ຄວາມເຊື່ອ,
ແລະ ຄົນຈຳນວນຫລວງຫລາຍກໍເພີ່ມເຂົ້າມາໃນອົງພຣະຜູ້ເປັນເຈົ້າ.
[25]ບາຣະນາບາຈຶ່ງໄປຫາໂຊໂລທີ່ເມືອງຕາໂຊ.[26]ເມື່ອທ່ານເຫັນໂຊໂລແລ້ວ, ກໍພາທ່ານມາທີ່ເມືອງອັນຕີໂອເຂຍ.
ແລະທ່ານທັງສອງກໍປະຊຸມຮ່ວມກັບຄຣິສຕະຈັກນັ້ນຕະຫລອດທັງປີ ແລະ ສັ່ງສອນຄົນເປັນຈຳນວນຫລາຍ. ພວກສາວົກກໍໄດ້ມີຊື່ວ່າເປັນ
ຄຣິສຕຽນ ຄັ້ງທຳອິດໃນເມືອງ ອັນຕີໂອເຂຍ.
[27]ໃນເວລານັ້ນ ພວກຜູ້ທຳນວາຍຈາກນະຄອນ ເຢຣູຊາເລັມໄດ້ລົງມາທີ່ເມືອງອັນຕີໂອເຂຍ.[28]ຄົນໜຶ່ງໃນພວກເຂົາ, ທີ່ຊື່ວ່າ ອາຄະໂບ,
ໄດ້ຢືນຂຶ້ນແລະທຳນວາຍໂດຍພຣະວິນຍານວ່າ ຈະເກີດມີຄວາມອຶດຢາກຄັ້ງຍິ່ງໃຫຍ່ຂຶ້ນໃນທົ່ວແຜ່ນດິນໂລກ.
ເລື່ອງນີ້ໄດ້ເກີດຂຶ້ນໃນສະໄໝການປົກຄອງຂອງກະສັດ ກະລາວດີໂອ.
[29]ດັ່ງນັ້ນ, ພວກສາວົກຈຶ່ງຕັດສິນໃຈກັນວ່າພວກເຂົາຈະບໍລິຈາກຕາມກຳລັງ, ແລະ ສົ່ງໄປຊ່ວຍເຫລືອພີ່ນ້ອງໃນແຂວງຢູດາຍ.
[30]ພວກເຂົາກໍໄດ້ເຮັດຢ່າງນັ້ນ; ພວກເຂົາສົ່ງເງິນໄປໃຫ້ພວກຜູ້ປົກຄອງໂດຍຝາກກັບບາຣະນາບາ ແລະ ໂຊໂລ.


generated on Tue Jun 17 19:01:42 2025

12 1ໃນເວລານັ້ນ ກະສັດເຮໂຣດໄດ້ຈັບກຸມບາງຄົນໃນຄຣິສຕະຈັກ ເພື່ອວ່າທ່ານຈະທຳການທາລຸນບາງຄົນ. 2ທ່ານຂ້າຢາໂກ
ໂບທີ່ເປັນອ້າຍຂອງໂຢຮັນດ້ວຍດາບ.

3ຫລັງຈາກທີ່ທ່ານເຫັນວ່າເລື່ອງນັ້ນເປັນທີ່ພໍໃຈຂອງພວກຢິວ, ທ່ານກໍສັ່ງໃຫ້ຈັບກຸມເປໂຕດ້ວຍ.
ເຫດການເຫລົ່ານີ້ເກີດຂຶ້ນໃນລະຫວ່າງເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ. 4ຫລັງຈາກທີ່ຈັບເປໂຕມາໄດ້ແລ້ວ, ກໍຂັງທ່ານໄວ້ໃນຄຸກ ແລະ
ຈັດໃຫ້ມີທະຫານສີ່ໝູ່ ໝູ່ລະສີ່ຄົນຄຸມທ່ານໄວ້; ເຮໂຣດຕັ້ງໃຈທີ່ຈະພາເປໂຕອອກມາໃຫ້ປະຊາຊົນ ຫລັງຈາກເທດສະການປັດສະຄາແລ້ວ.
5ດັ່ງນັ້ນເປໂຕຈຶ່ງຖືກຂັງໄວ້ໃນຄຸກ, ແຕ່ຄຣິສຕະຈັກໄດ້ ອະທິຖານເພື່ອທ່ານດ້ວຍໃຈຮ້ອນຮົນຕໍ່ພຣະເຈົ້າ.
6ໃນຄືນນັ້ນກ່ອນເຖິງວັນທີ່ເຮໂຣດຈະພາເປໂຕອອກມາ, ເປໂຕກຳລັງນອນຫລັບຢູ່ລະຫວ່າງທະຫານສອງຄົນ, ຖືກລ່າມດ້ວຍໂສ້ສອງເສັ້ນ,
ແລະມີພວກຍາມເຝົ້າເບິ່ງຢູ່ທີ່ຫນ້າປະຕູຄຸກ.
7ໃນທັນໃດນັ້ນ, ເທວະດາອົງໜຶ່ງຂອງອົງພຣະຜູ້ເປັນເຈົ້າມາປາກົດຢູ່ຂ້າງໆເປໂຕ, ແລະມີແສງສະຫວ່າງສ່ອງລົງມາໃນຫ້ອງຂັງນັ້ນ,
ເທວະດາອົງນັ້ນມາກະຕຸ້ນທີ່ສີຂ້າງຂອງທ່ານໃຫ້ຕື່ນຂຶ້ນ ແລະກ່າວວ່າ, "ຈົ່ງລຸກຂຶ້ນໄວໆ," ໂສ້ນັ້ນກໍຫລຸດຕົກຈາກມືຂອງທ່ານ.
8ເທວະດາອົງນັ້ນກ່າວກັບທ່ານວ່າ, "ຈົ່ງແຕ່ງຕົວແລະສຸບເກີບ." ເປໂຕກໍປະຕິບັດຕາມ. ເທວະດາອົງນັ້ນກ່າວກັບທ່ານວ່າ, "ຈົ່ງໃສ່ເສື້ອຄຸມ ແລະ
ນຳຂ້າພະເຈົ້າມາ."
9ເປໂຕຈຶ່ງນຳເທວະດາອົງນັ້ນອອກໄປ. ທ່ານບໍ່ຮູ້ວ່າສິ່ງທີ່ເທວະດາເຮັດນັ້ນເປັນຄວາມຈິງ. ທ່ານຄິດວ່າທ່ານກຳລັງເຫັນໃນນິມິດ.
10ຫລັງຈາກທີ່ພວກທ່ານຍ່າງຜ່ານຄົນເຝົ້າຍາມຊັ້ນທີ່ໜຶ່ງ ແລະ ຊັ້ນທີ່ສອງໄປແລ້ວ, ພວກທ່ານກໍມາຮອດປະຕູເຫລັກທາງທີ່ເຂົ້າໄປໃນເມືອງ;
ປະຕູບານນັ້ນກໍເປີດອອກເອງ. ພວກທ່ານຈຶ່ງອອກໄປ, ແລະຍ່າງໄປຕາມທາງ, ເທວະດາກໍຫາຍວັບໄປຈາກທ່ານ.
11ເມື່ອເປໂຕຮູ້ສຶກຕົວແລ້ວ, ຈຶ່ງກ່າວວ່າ, “ຕອນນີ້ຂ້າພະເຈົ້າຮູ້ແນ່ແລ້ວວ່າ ອົງພຣະຜູ້ເປັນເຈົ້າຊົງໃຊ້ເທວະ
ດາຂອງພຣະອົງໃຫ້ມາປ່ອຍຂ້າພະເຈົ້າໃຫ້ພົ້ນຈາກເງື້ອມມືຂອງເຮໂຣດ, ແລະ
ຈາກຄວາມປອງຮ້າຍຂອງພວກຢິວ.” 12ຫລັງຈາກທີ່ທ່ານຄິດໄດ້ຢ່າງນັ້ນແລ້ວ, ທ່ານກໍໄປທີ່ເຮືອນຂອງມາຣີ ແມ່ຂອງໂຢຮັນ,
ຜູ້ທີ່ມີອີກຊື່ໜຶ່ງວ່າມາຣະໂກ, ຜູ້ທີ່ເຊື່ອຈຳນວນຫລາຍກຳລັງປະຊຸມອະທິຖານຢູ່ນຳກັນ.
13ເມື່ອເປໂຕເຄາະປະຕູຊັ້ນນອກ, ສາວໃຊ້ຄົນໜຶ່ງຊື່ ໂຣດາ ກໍອອກມາຖາມ. 14ເມື່ອນາງຈື່ໄດ້ວ່າເປັນສຽງຂອງເປໂຕ, ກໍຊື່ນຊົມຍິນດີຫລາຍ
ແຕ່ແທນທີ່ຈະເປີດປະຕູໃຫ້; ນາງກັບແລ່ນເຂົ້າໄປໃນຫ້ອງ; ແລະບອກວ່າເປໂຕກຳລັງຢືນຢູ່ທີ່ປະຕູ. 15ພວກເຂົາຈຶ່ງກ່າວກັບນາງວ່າ,
“ເຈົ້າເປັນບ້າ.” ແຕ່ນາງກໍຢືນຢັນວ່າເປັນເຊັ່ນນັ້ນແທ້. ພວກເຂົາກ່າວວ່າ, “ນັ້ນເປັນເທວະດາປະຈຳຕົວຂອງທ່ານ.”
16ແຕ່ເປໂຕກໍຍັງເຄາະປະຕູຕໍ່ໄປ, ແລ້ວເມື່ອພວກເຂົາເປີດປະຕູມາ, ເຫັນທ່ານກໍປະຫລາດໃຈ. 17ເປໂຕຍົກມືໃຫ້ພວກເຂົາມິດ,
ແລະທ່ານບອກພວກເຂົາວ່າອົງພຣະຜູ້ເປັນເຈົ້າຊົງພາທ່ານອອກມາຈາກຄຸກແບບໃດ. ທ່ານກ່າວວ່າ, “ຈົ່ງບອກເລື່ອງນີ້ກັບຢາໂກໂບ
ແລະພວກພີ່ນ້ອງໃຫ້ຮູ້ນຳ.” ແລ້ວເພິ່ນກໍອອກໄປບ່ອນອື່ນ.
18ເມື່ອເຖິງມື້ເຊົ້າມາ, ພວກທະຫານກໍພາກັນຕົກໃຈຢ່າງໃຫຍ່ກ່ຽວກັບສິ່ງທີ່ເກີດຂຶ້ນກັບເປເຕ. 19ຫລັງຈາກທີ່ເຮໂຣດຊອກຫາເປໂຕບໍ່ເຫັນ,
ທ່ານຈຶ່ງສອບຖາມພວກຄົນເຝົ້າຍາມ ແລະສັ່ງໃຫ້ປະຫານຊີວິດ. ແລ້ວທ່ານກໍລົງມາຈາກແຂວງຢູດາຍໄປທີ່ເມືອງກາຍຊາເຣຍ ແລະ ອາ
ໄສຢູ່ທີ່ນັ້ນ.
20ເຮໂຣດກໍເກີດມີຄວາມຄຽດແຄ້ນຕໍ່ຊາວເມືອງຕີເຣ ແລະ ຊາວຊີໂດນຫລາຍ. ຊາວເມືອງຈຶ່ງພາກັນໄປຫາທ່ານ.
ພວກເຂົາໄດ້ກ້ຽວກ່ອມບຣາຊະໂຕ, ຜູ້ຮັບຜິດຊອບວັງຂອງກະສັດ, ໃຫ້ຊ່ວຍພວກເຂົາ. ພວກເຂົາຂໍໃຫ້ສ້າງມິດໄມຕີກັນ,
ເພາະວ່າເມືອງຂອງພວກເຂົາຕ້ອງໄດ້ຮັບອາຫານຈາກເມືອງຂອງກະສັດອົງນັ້ນ. 21ເມື່ອຮອດມື້ນັດໝາຍເຮໂຣດກໍນຸ່ງເຄື່ອງກະສັດ ແລະ
ນັ່ງເທິງບັນລັງ; ທ່ານກ່າວຄຳປາໄສຕໍ່ພວກເຂົາ.
22ຜູ້ຄົນຮ້ອງຂຶ້ນວ່າ, “ນີ້ເປັນສຽງຂອງພະ, ບໍ່ແມ່ນສຽງຂອງມະນຸດ!” 23ໃນທັນໃດນັ້ນ
ເທວະດາອົງໜຶ່ງຂອງອົງພຣະຜູ້ເປັນເຈົ້າກໍເຮັດໃຫ້ທ່ານປ່ວຍເປັນພະຍາດຮ້າຍແຮງ, ເພາະວ່າທ່ານບໍ່ໄດ້ຖວາຍກຽດແດ່ພຣະເຈົ້າ; ແລ້
ວທ່ານກໍຖືກໜອນກັດກິນ ແລະ ເສຍຊີວິດ.
24ແຕ່ພຣະຄຳຂອງພຣະເຈົ້າໄດ້ຈະເລີນຂຶ້ນ ແລະ ແຜ່ຂະຫຍາຍອອກໄປ. 25ຫລັງຈາກບາຣະນາບາກັບໂຊໂລສຳເລັດພາລະກິດໃນນະຄອນ
ເຢຣູຊາເລັມແລ້ວ, ພວກທ່ານກໍກັບຈາກທີ່ນັ້ນພາໂຢຮັນ, ທີ່ມີອີກຊື່ໜຶ່ງວ່າມາຣະໂກໄປນຳ.

 generated on Tue Jun 17 19:01:42 2025

13 [1]ເວລານັ້ນ ມີບາງຄົນທີ່ເປັນຜູ້ທຳນວາຍ ແລະ ອາຈານໃນຄຣິສຕະຈັກອັນຕີໂອເຂຍ, ພວກທ່ານຄື ບາຣະນາບາ, ຊີໂມນ (ທີ່ເອີ້ນວ່າ ນີເກີ),
ລູກີໂອຊາວເມືອງກີເຣເນ, ມານາເອນ (ຜູ້ທີ່ໄດ້ຮັບການລ້ຽງດູຂຶ້ນມາດ້ວຍກັນກັບເຮໂຣດເຈົ້າເມືອງ), ແລະ ໂຊໂລ.
[2]ຂະນະທີ່ພວກທ່ານກຳລັງນະມັດສະການອົງພະຜູ້ເປັນເຈົ້າ ແລະ ຖືສິນອົດອາຫານຢູ່ນັ້ນ, ພຣະວິນຍານບໍຣິສຸດເຈົ້າກ່າວວ່າ,
"ຈົ່ງຕັ້ງບາຣະນາບາກັບໂຊໂລໄວ້, ສຳຫລັບວຽກນັ້ນທີ່ເຮົາເອີ້ນໃຫ້ພວກທ່ານເຮັດ."[3]ຫລັງຈາກທີ່ພວກທ່ານຖືສິນອົດອາຫານ, ອະທິຖານ, ແລະ
ວາງມືໃສ່ຕົວທ່ານທັງສອງແລ້ວ, ພວກເຂົາກໍສົ່ງທ່ານທັງສອງໄປ.

[4]ດັ່ງນັ້ນ ບາຣະນາບາ ແລະ ໂຊໂລ ກໍເຊື່ອຟັງພຣະວິນຍານບໍຣິສຸດເຈົ້າຈຶ່ງລົງໄປທີ່ເມືອງແຊລູເກຍ;
ຈາກທີ່ນັ້ນພວກທ່ານໄດ້ລົງເຮືອໄປທີ່ເກາະໄຊປຣັດ.[5]ໃນຂະນະທີ່ພວກທ່ານຢູ່ໃນເມືອງຊາລາມີ, ພວກທ່ານປະກາດພຣະ
ທັມຂອງພຣະເຈົ້າໃນທຳມະສາລາຂອງຊາວຢິວ. ພວກທ່ານໄດ້ເຫັນໂຢຮັນທີ່ຊື່ມາຣະໂກເປັນຜູ້ຊ່ວຍດ້ວຍ.
[6]ເມື່ອພວກທ່ານເດີນທາງໄປທົ່ວທັງເກາະຈົນມາຮອດເມືອງປາໂຟແລ້ວ, ພວກທ່ານໄດ້ພົບກັບຊາວຢິວຄົນໜຶ່ງເຊິ່ງເປັນຜູ້ມີເວດມົນ, ແລະ
ເປັນຜູ້ທຳນວາຍປອມ, ທີ່ມີຊື່ວ່າບາຣະເຢຊູ.[7]ຜູ້ມີເວດມົນຄົນນີ້ເປັນໝູ່ກັບຜູ້ປົກຄອງເກາະ, ເຊຄີໂອໂປໂລ, ເຊິ່ງເປັນຄົນສະຫລາດຮອບຮູ້.
ຊາຍຄົນນີ້ເຊີນບາຣະນາບາກັບໂຊໂລມາພົບ, ເພາະທ່ານຢາກຈະຟັງພຣະທັມຂອງພຣະເຈົ້າ.[8]ແຕ່ເອລີມາ "ຜູ້ມີເວດມົນ" (ນັ້ນເປັນຄຳແປຊື່ຂອງ
ລາວ) ຂັດຂວາງທ່ານທັງສອງໄວ້; ລາວພະຍາຍາມບໍ່ໃຫ້ຜູ້ປົກຄອງເຊື່ອ.
[9]ແຕ່ໂຊໂລທີ່ມີອີກຊື່ໜຶ່ງວ່າໂປໂລ ທີ່ເຕັມໄປດ້ວຍພຣະວິນຍານບໍລິສຸດ ແລະ ເພັ່ງຕາເບິ່ງເອລີມາ.[10]ແລ້ວກ່າວວ່າ, "ທ່ານລູກຂອງຜີຮ້າຍ,
ທ່ານເຕັມໄປດ້ວຍອຸບາຍ ແລະ ຄວາມຊົ່ວຮ້າຍທຸກຢ່າງ. ທ່ານເປັນສັດຕູກັບຄວາມຊອບທັມທຸກຢ່າງ.
ທ່ານຈະບໍ່ຢຸດບິດເບືອນຄວາມຈິງຂອງອົງພຣະຜູ້ເປັນເຈົ້າ, ຫລື?
[11]ເບິ່ງເຖີດ, ພຣະຫັດຂອງອົງພຣະຜູ້ເປັນເຈົ້າຢູ່ເໜືອທ່ານ, ທ່ານຈະເປັນຄົນຕາບອດ. ທ່ານຈະເບິ່ງບໍ່ເຫັນແສງຕາເວັນໄປຊົ່ວໄລຍະໜຶ່ງ."
ໃນທັນໃດນັ້ນຄວາມມືດມົວກໍເກີດກັບ ເອລີມາ; ລາວຈຶ່ງຫລຽວໄປອ້ອມໆ ເພື່ອຂໍໃຫ້ຄົນຊ່ວຍຈູງລາວໄປ.
[12]ເມື່ອຜູ້ປົກຄອງໄດ້ເຫັນເຫດການທີ່ເກີດຂຶ້ນ, ທ່ານກໍເຊື່ອ, ເພາະວ່າທ່ານປະຫລາດໃຈໃນຄຳສອນກ່ຽວກັບອົງພຣະຜູ້ເປັນເຈົ້າ.
[13]ແລ້ວໂປໂລກັບພວກຂອງທ່ານກໍລົງເຮືອເດີນທາງອອກຈາກເມືອງປາໂຟໄປທີ່ເມືອງເປກາໃນແຂວງປຳຟີເລຍ. ແຕ່ໂຢຮັນໄດ້ຖິ້ມພວກທ່ານກັບໄປ
ທີ່ນະຄອນ ເຢຣູຊາເລັມ.[14]ໂປໂລ ແລະ ພວກຂອງທ່ານໄດ້ເດີນທາງຈາກເມືອງເປກາ ມາຮອດເມືອງອັນຕີໂອເຂຍໃນແຂວງປີຊີເດຍ.
ທີ່ນັ້ນພວກທ່ານໄດ້ເຂົ້າໄປໃນທຳມະສາລາ ແລະ ນັ່ງລົງໃນວັນຊະບາໂຕ.[15]ຫລັງຈາກອ່ານພຣະບັນຍັດ ແລະ ຖ້ອຍຄຳຂອງຜູ້ທຳນວາຍແລ້ວ,
ບັນດາຜູ້ປົກຄອງທຳມະສາລາກໍໃຊ້ຄົນໄປບອກກັບພວກທ່ານວ່າ, "ພີ່ນ້ອງເອີຍ, ຖ້າພວກທ່ານມີຖ້ອຍຄຳໜູນໃຈໃຫ້ກັບຄົນທີ່ນີ້,
ກໍຂໍໃຫ້ກ່າວເຖີດ."
[16]ໂປໂລກໍລຸກຂຶ້ນແລະຍົກມື; ທ່ານກ່າວວ່າ, "ທ່ານທັງຫລາຍຜູ້ເປັນຊົນຊາດອິດສະຣາເອນ ແລະ ທ່ານທັງຫລາຍທີ່ຢຳເກງພຣະເຈົ້າ, ຂໍ
ຈົ່ງຟັງເຖີດ.[17]ພຣະເຈົ້າຂອງຊົນຊາດອິດສະຣາເອນນີ້ໄດ້ຊົງເລືອກເອົາບັນພະບຸລຸດຂອງຂ້າພະເຈົ້າໄວ້ ແລະ ເຮັດໃຫ້ມີຈຳນວນຄົນຫລວງຫລາຍ
ໃນຂະນະທີ່ອາໄສຢູ່ໃນແຜ່ນດິນຂອງປະເທດເອຢິບ, ແລະ ພຣະອົງຊົງນຳພວກທ່ານອອກມາດ້ວຍພຣະຫັດອັນຊົງຣິດ.
[18]ພຣະອົງຊົງຈັດຫາສິ່ງທີ່ຈຳເປັນໃຫ້ກັບພວກທ່ານໃນຖິ່ນແຫ້ງແລ້ງກັນດານມາເປັນເວລາປະມານສີ່ສິບປີ.
[19]ຫລັງຈາກທີ່ພຣະອົງໄດ້ທຳລາຍເຈັດຊົນຊາດໃນດິນແດນ ການາອານແລ້ວ,
ພຣະອົງກໍມອບແຜ່ນດິນຂອງຄົນເຫລົ່ານັ້ນໃຫ້ກັບຊົນຊາດຂອງພຣະອົງໃຫ້ເປັນມໍຣະດົກ.[20]ເຫດການທັງໝົດນີ້
ເກີດຂຶ້ນເມື່ອສີ່ຮ້ອຍຫ້າສິບປີມາແລ້ວ. ຫລັງຈາກນີ້, ພຣະເຈົ້າໄດ້ສົ່ງຜູ້ປົກຄອງມາປົກຄອງໃຫ້ແກ່ພວກ
ເຂົາຈົນຮອດສະໄໝຂອງຜູ້ທຳນວາຍຊາມູເອນ.
[21]ເວລານັ້ນ ປະຊາຊົນໄດ້ຮ້ອງຂໍໃຫ້ມີກະສັດ, ພຣະເຈົ້າຈຶ່ງຊົງໃຫ້ ໂຊນ ລູກຊາຍຂອງກີເຊ, ຈາກເຜົ່າເບນຢາມິນ, ໃຫ້ແກ່ພວກ
ທ່ານເປັນກະສັດເປັນເວລາສີ່ສິບປີ.[22]ຫລັງຈາກທີ່ພຣະເຈົ້າປົດໂຊນອອກຈາກການເປັນກະສັດ, ພຣະອົງ
ຊົງຕັ້ງດາວິດຂຶ້ນເປັນກະສັດຂອງພວກທ່ານ. ພຣະເຈົ້າກ່າວກ່ຽວກັບດາວິດວ່າ, 'ຂ້າພະເຈົ້າເຫັນວ່າ ດາວິດ ລູກຊາຍຂອງ ເຢຊີ ເປັນຄົນທີ່ຂ້າພະ
ເຈົ້າຖືກໃຈທີ່ຈະເຮັດທຸກສິ່ງທີ່ຂ້າພະເຈົ້າປະສົງໃຫ້ລາວເຮັດ.'
[23]ພຣະເຈົ້າປະທານພຣະຜູ້ຊ່ວຍໃຫ້ພົ້ນຂອງຊາວອິດສະຣາເອນ, ຄືພຣະເຢຊູຄຣິດເຈົ້າ, ຈາກເຊື້ອສາຍຂອງດາວິດຕາມທີ່ພຣະອົງຊົງສັນຍາໄວ້.
[24]ເຫດການນີ້ໄດ້ເກີດຂຶ້ນ, ກ່ອນທີ່ພຣະເຢຊູຄຣິດເຈົ້າສະເດັດມາ, ໂຢຮັນໄດ້ປະກາດເຖິງບັບຕິສະມາ
ທີ່ສະແດງເຖິງການກັບໃຈໃໝ່ຕໍ່ຊາວອິດສະລາເອນທຸກຄົນແລ້ວ.[25]ຂະນະທີ່ໂຢຮັນກຳລັງສຳເລັດພາລະກິດຂອງທ່ານ, ທ່ານກ່າວວ່າ,
'ພວກທ່ານຄິດວ່າຂ້າພະເຈົ້າແມ່ນຜູ້ໃດ? ຂ້າພະເຈົ້າບໍ່ແມ່ນຜູ້ນັ້ນ. ແຕ່ຈົ່ງຟັງເຖີດ, ຜູ້ທີ່ມາພາຍຫລັງຂ້າພະເຈົ້າ,
ທີ່ຂ້າພະເຈົ້າບໍ່ສົມຄວນທີ່ຈະປົດສາຍເກີບອອກຈາກຕີນຂອງພຣະອົງ.'
[26]ພີ່ນ້ອງທັງຫລາຍ, ທີ່ເປັນລູກຫລານຂອງເຊື້ອສາຍອັບຣາຮາມ, ແລະ ທຸກຄົນທີ່ຢູ່ທ່າມກາງພວກທ່ານທີ່ນັບຖືພຣະເຈົ້າ,
ຖ້ອຍຄຳແຫ່ງຄວາມລອດພົ້ນນີ້ໄດ້ສົ່ງມາເຖິງຂ້າພະເຈົ້າ.[27]ເພາະວ່າພວກຄົນທີ່ຢູ່ໃນນະຄອນ ເຢຣູຊາເລັມ, ແລະ
ຜູ້ປົກຄອງຂອງພວກເຂົາບໍ່ໄດ້ຮູ້ຈັກພຣະອົງ, ແລະ
ພວກເຂົາໄດ້ເຮັດໃຫ້ຖ້ອຍຄຳຂອງທຳນວາຍທີ່ອ່ານສູ່ກັນຟັງໃນວັນຊະບາໂຕສຳເລັດໂດຍການກ່າວໂທດພຣະອົງ.
[28]ເຖິງແມ່ນວ່າພວກເຂົາບໍ່ໄດ້ພົບຄວາມຜິດປະການໃດທີ່ມີໂທດເຖິງຕາຍໃນພຣະອົງ, ພວກເຂົາຍັງຂໍຮ້ອງປີລາດໃຫ້ປະຫານພຣະອົງ.
[29]ເມື່ອພວກເຂົາໄດ້ເຮັດທຸກສິ່ງໃຫ້ສຳເລັດຕາມທີ່ຂຽນໄວ້ກ່ຽວກັບພຣະອົງແລ້ວ, ພວກເຂົາກໍເອົາພຣະສົບລົງຈາກໄມ້ກາງແຂນ ແລະ
ວາງພຣະສົບໄວ້ໃນອຸບມຸງ.
[30]ແຕ່ພຣະເຈົ້າໄດ້ຊົງບັນດານໃຫ້ພຣະອົງເປັນຄືນມາຈາກຄວາມຕາຍ.[31]ບັນດາຄົນທີ່ຢູ່ກັບພຣະອົງມາຈາກແຂວງຄາລີເລຈົນເຖິງນະຄອນ
ເຢຣູຊາເລັມ. ຈຶ່ງໄດ້ເຫັນພຣະອົງເປັນເວລາຫລາຍວັນ ບັດນີ້ ຄົນເຫລົ່ານີ້ກໍຍັງໄດ້ເປັນພະຍານຂອງພຣະອົງຕໍ່ຜູ້ຄົນ.
[32]ເຮົານຳຂ່າວປະເສີດກ່ຽວກັບພຣະສັນຍາທີ່ໄດ້ເຮັດໄວ້ກັບບັນພະບູລຸດຂອງຂ້າພະເຈົ້າ[33]ພຣະເຈົ້າຊົງບັນດານໃຫ້ພະສັນຍາເຫລົ່ານີ້ສຳເລັດ,
ເພື່ອພວກເຮົາທີ່ເປັນລູກຫລານຂອງພວກເຂົາ, ໃນການບັນດານໃຫ້ພຣະເຢຊູຄຣິດເຈົ້າເປັນຄືນມາມີຊີວິດ. ເລື່ອງ
ນີ້ໄດ້ຂຽນໄວ້ໃນພຣະທຳບົດເພັງສັນລະເສີນບົດທີສອງວ່າ: 'ເຈົ້າເປັນບຸດຂອງເຮົາ,

ມື້ນີ້ເຮົາເປັນບິດາຂອງເຈົ້າ.'[34]ແລ້ວຍັງກ່າວເຖິງຄວາມຈິງທີ່ພຣະເຈົ້າຊົງບັນດານໃຫ້ພຣະອົງເປັນຄືນມາຈາກຄວາມຕາຍ
ເພື່ອທີ່ພຣະກາຍຂອງພຣະອົງຈະບໍ່ເປື່ອຍເນົ່າ, ພຣະອົງກ່າວດັ່ງນີ້ວ່າ: 'ເຮົາຈະໃຫ້ພຣະພອນອັນບໍຣິສຸດ ແລະ ໝັ້ນຄົງຂອງດາວິດແກ່ທ່ານ.'
[35]ນີ້ຄືເຫດຜົນທີ່ທ່ານຍັງກ່າວໄວ້ໃນພຣະທຳບົດເພງສັນລະເສີນບົດອື່ນໆໄວ້ດ້ວຍວ່າ,
'ພຣະອົງຈະບໍ່ປ່ອຍໃຫ້ອົງບໍຣິສຸດຂອງພຣະອົງເປື່ອຍເນົ່າ.'[36]ເພາະວ່າຫລັງຈາກທີ່ດາວິດໄດ້ບົວລະບັດຕາມພຣະປະສົງຂອງພຣະເຈົ້າໃນຊ່ວງອາຍຸຂອງທ່ານແລ້ວ,
ທ່ານກໍລ່ວງຫລັບໄປ; ແລະ ຖືກຝັງໄວ້ກັບບັນພະບູລຸດຂອງທ່ານແລ້ວກໍເປື່ອຍເນົ່າໄປ.
[37]ແຕ່ພຣະອົງຜູ້ທີ່ພຣະເຈົ້າຊົງບັນດານໃຫ້ເປັນຄືນມາບໍ່ເປື່ອຍເນົ່າໄປ.
[38]ເພາະສະນັ້ນ ພີ່ນ້ອງທັງຫລາຍ, ຂໍໃຫ້ພວກເຈົ້າເຂົ້າໃຈວ່າ, ໂດຍຊາຍຜູ້ນີ້ທີ່ປະກາດການຍົກໂທດຄວາມຜິດບາບໃຫ້ແກ່ທ່ານ.[39]ໂດຍພຣະອົງ
ທຸກຄົນທີ່ເຊື່ອກໍຖືວ່າເປັນຄົນຊອບທຳຈາກທຸກສິ່ງຕາມພຣະບັນຍັດຂອງໂມເຊເຮັດໃຫ້ພວກທ່ານເປັນຄົນຊອບທຳບໍ່ໄດ້.
[40]ເພາະສະນັ້ນ ຈົ່ງລະວັງໃຫ້ດີ ເພື່ອວ່າຖ້ອຍຄຳຂອງຜູ້ທຳນວາຍໄດ້ກ່າວໄວ້ຈະບໍ່ເກີດຂຶ້ນກັບພວກທ່ານ:[41]“ຈົ່ງເບິ່ງເຖີດ, ທ່ານພວກຄົນທີ່
ໝິ່ນປະໝາດ, ຈົ່ງປະຫລາດໃຈແລະຈິບຫາຍໄປ; ເພາະຂ້າພະເຈົ້າກຳລັງເຮັດວຽກໃນວັນເວລາຂອງພວກທ່ານ, ວຽກ
ງານທີ່ພວກທ່ານຈະບໍ່ເຊື່ອ, ແມ່ນວ່າຈະມີຄົນປະກາດກັບທ່ານ.”
[42]ຂະນະທີ່ໂປໂລ ແລະ ບາຣະນາບາຈາກໄປ, ພວກທ່ານກໍອ້ອນວອນໃຫ້ທ່ານທັງສອງກ່າວຖ້ອຍຄຳຢ່າງດຽວກັນອີກໃນວັນຊະບາໂຕຕໍ່ໄປ.
[43]ເມື່ອການປະຊຸມໃນວັນຊະບາໂຕເລີກແລ້ວ, ພວກຢິວ ແລະ ຄົນທີ່ເຂົ້າຮີດຢິວທີ່ນັບຖືພຣະເຈົ້າຫລາຍຄົນກໍຕິດຕາມໂປໂລ ແລະ ບາຣະນາບາ,
ທ່ານທັງສອງຈຶ່ງໄດ້ໂອ້ລົມ ແລະໜູນໃຈໃຫ້ພວກເຂົາດຳເນີນຊີວິດຢູ່ໃນພຣະຄຸນຂອງພຣະເຈົ້າ.
[44]ໃນວັນສະບາໂຕຕໍ່ມາ, ຄົນໃນເມືອງເກືອບທັງໝົດກໍມາປະຊຸມກັນເພື່ອທີ່ຈະຟັງພຣະທັມຂອງອົງພຣະຜູ້ເປັນເຈົ້າ.[45]ເມື່ອພວກຢິວເຫັນຝູງຊົນ,
ພວກເຂົາກໍເຕັມດ້ວຍຄວາມອິດສາ ແລະ ເວົ້າຄັດຄ້ານຄຳທີ່ໂປໂລເວົ້າ ແລະ ເວົ້າໝິ່ນປະໝາດທ່ານ.
[46]ແຕ່ໂປໂລ ແລະ ບາຣະນາບາກ່າວດ້ວຍໃຈກ້າຫານວ່າ, “ເປັນສິ່ງຈຳເປັນທີ່ຈະຕ້ອງກ່າວພຣະທັມຂອງພຣະເຈົ້າໃຫ້ພວກທ່ານຟັງກ່ອນ.
ແຕ່ເມື່ອພວກທ່ານບໍ່ຍອມຮັບ ແລະ ຕັດສິນໃຈຕົວເອງວ່າບໍ່ສົມຄວນທີ່ຈະໄດ້ຮັບຊີວິດນິລັນດອນ, ດັ່ງນັ້ນ, ພວກເຮົາກໍຈະໄປຫາຄົນຕ່າງຊາດ.
[47]ເພາະວ່າອົງພຣະຜູ້ເປັນເຈົ້າ, ກ່າວສັ່ງຂ້າພະເຈົ້າວ່າ, ‘ເຮົາຕັ້ງເຈົ້າໄວ້ໃຫ້ເປັນແສງສະຫວ່າງສຳຫລັບຄົນຕ່າງຊາດ,
ເພື່ອທ່ານຈະໄດ້ນຳຄວາມລອດພົ້ນໄປຈົນເຖິງທີ່ສຸດປາຍແຜນດິນໂລກ.’”
[48]ເມື່ອຄົນຕ່າງຊາດໄດ້ຍິນດັ່ງນັ້ນ, ຕ່າງກໍຊື່ນຊົມຍິນດີ ແລະ ສັນລະເສີນຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າ. ຄົນຫລ
ວງຫລາຍທີ່ໄດ້ຖືກເລືອກໄວ້ເພື່ອໃຫ້ໄດ້ຮັບຊີວິດນິລັນດອນກໍເຊື່ອ.[49]ພຣະທຳຂອງອົງພຣະຜູ້ເປັນເຈົ້າກໍແຜ່ອອກໄປທົ່ວທັງຂົງເຂດນັ້ນ.
[50]ແຕ່ພວກຢິວໄດ້ຕົວະຍົວະໃຫ້ບັນດາແມ່ຍິງທີ່ເປັນຄົນສຳຄັນ, ແລະ ນັບຖືພຣະເຈົ້າກັບພວກຜູ້ຊາຍທີ່ເປັນຜູ້ນຳຂອງເມືອງນັ້ນ. ພວກເຂົາຕົວະຍົ
ວະໃຫ້ມີການຂົ່ມເຫັງໂປໂລກັບບາຣະນາບາ ແລະ ຂັບໄລ່ທ່ານທັງສອງໃຫ້ອອກໄປຈາກເມືອງນັ້ນ.[51]ໂປໂລກັບບາຣະນາບາກໍສັນຂີ້ຝຸ່ນອອກຈ
າກຕີນພວກທ່ານ. ແລ້ວພວກທ່ານທັງສອງກໍໄປທີ່ເມືອງອີໂກນີອົນ.[52]ແລະ ເຕັມດວ້ຍພຣະວິນຍານບໍຣິສຸດເຈົ້າ.


generated on Tue Jun 17 19:01:42 2025

14 [1]ໃນເມືອງອີໂກນີອົນທີ່ໂປໂລ ແລະ ບາຣະນາບາພາກັນເຂົ້າໄປໃນທຳມະສາລາຂອງພວກຢິວ ແລະ ກ່າວກ່ຽວກັບທາງນັ້ນ ເຊິ່ງເຮັດໃຫ້ທັງ
ພວກຢິວ ແລະ ພວກກຣີກຈຳນວນຫລາຍເຊື່ອ.[2]ແຕ່ພວກຢິວທີ່ບໍ່ເຊື່ອຟັງໄດ້ຕົວະຍົວະພວກຄົນຕ່າງຊາດ ໃຫ້ກຽດຊັງພວກພີ່ນ້ອງທີ່ເຊື່ອ.

[3]ເຫດສະນັ້ນ ທ່ານທັງສອງຈຶ່ງອາໄສຢູ່ທີ່ນັ້ນດົນນານ, ປະກາດດ້ວຍໃຈກ້າຫານດ້ວຍຣິດອຳນາດຂອງອົງພຣະຜູ້ເປັນເຈົ້າ, ໃນຂະ
ນະທີ່ພຣະອົງຊົງຮັບຮອງຖ້ອຍຄຳແຫ່ງພຣະຄຸນຂອງພຣະອົງ. ພຣະອົງຊົງເຮັດໂດຍປະທານໝາຍສຳຄັນ ແລະ
ການອັດສະຈັນດ້ວຍມືຂອງໂປໂລ ແລະ ບາຣະນາບາ.[4]ແຕ່ຊາວເມືອງນັ້ນໄດ້ແຍກອອກເປັນສອງພວກ: ບາງຄົນຢູ່ຝ່າຍພວກຢິວ, ແລະບາງຄົນ
ຢູ່ຝ່າຍພວກອັກຄະສາວົກ.
[5]ເມື່ອພວກຄົນຕ່າງຊາດ ແລະ ພວກຢິວພະຍາຍາມຕົວະຍົວະບັນດາຜູ້ປົກຄອງໃຫ້ຂົ່ມເຫັງ ແລະ ເອົາກ້ອນຫີນແກວ່ງໃສ່ໂປໂລ ແລະ ບາຣະນາ
ບາ,[6]ທ່ານທັງສອງໄດ້ຮູ້ເຖິງເລື່ອງນີ້ ຈຶ່ງໜີໄປທີ່ເມືອງ ລີກາໂອເນຍ, ເມືອງລີຊະທາ, ແລະ ເມືອງເດຣະເບ, ແລະໃນເຂດແດນທີ່ຢູ່ໃກ້ຄຽງນັ້ນ.
[7]ແລ້ວພວກທ່ານກໍປະກາດຂ່າວປະເສີດທີ່ນັ້ນ.
[8]ໃນເມືອງລີຊະທາມີຊາຍຄົນໜຶ່ງນັ່ງຢູ່, ຕີນຂອງລາວບໍ່ມີແຮງ, ເຊິ່ງເປັນຄົນເປ້ຍມາຕັ້ງແຕ່ເກີດ, ທີ່ຍັງບໍ່ເຄີຍຍ່າງເລີຍ.[9]ຊາຍຄົນນີ້ຟັງຖ້ອຍຄຳທີ່ໂປ
ໂລເວົ້າ. ໂປໂລແນມເບິ່ງລາວ ແລະ ເຫັນວ່າມີຄວາມເຊື່ອພໍຈະໄດ້ຮັບການຮັກສາໃຫ້ຫາຍດີໄດ້.[10]ທ່ານຈຶ່ງບອກລາວດ້ວຍສຽງດັງວ່າ, “ຈົ່ງລຸກຂຶ້ນ
ຢືນ.” ຊາຍຄົນນັ້ນກໍໂດດຂຶ້ນແລ້ວຍ່າງໄປອ້ອມໆ.
[11]ເມື່ອຝູງຊົນເຫັນສິ່ງທີ່ໂປໂລເຮັດ, ພວກເຂົາຈຶ່ງພາກັນຮ້ອງຂຶ້ນເປັນພາສາກີລີເກຍວ່າ, “ພວກພະໄດ້ແປງກາຍເປັນມະນຸດລົງມາຫາພວກເຮົາ
ແລ້ວ”[12]ພວກເຂົາໃສ່ຊື່ໃຫ້ບາຣະນາບາວ່າ “ພະຊູດ,” ແລະເອີ້ນໂປໂລວ່າ, “ພະເຮຣະເມ,” ເພາະວ່າໂປໂລເປັນຄົນເວົ້າ.
[13]ຝ່າຍປະໂລຫິດຂອງພະຊູດທີ່ມີວິຫານຕັ້ງຢູ່ນອກເມືອງນັ້ນ, ໄດ້ນຳງົວ ແລະ ພວງມະໄລທີ່ປະຕູເມືອງ; ລາວແລະປະຊາຊົນຕ້ອງການຈະຖວາຍ
ເຄື່ອງບູຊາ.
[14]ແຕ່ເມື່ອພວກອັກຄະສາວົກ, ບາຣະນາບາ ແລະ ໂປໂລໄດ້ຍິນເລື່ອງນີ້, ພວກທ່ານກໍຈີກເສື້ອຜ້າຂອງຕົນແລ້ວຟ້າວແລ່ນເຂົ້າໄປໃນຝູງຊົນ, ຮ້ອງ
ຂຶ້ນວ່າ,[15]“ເປັນຫຍັງພວກທ່ານຈຶ່ງເຮັດເຊັ່ນນີ້?“ ຂ້າພະເຈົ້າກໍເປັນມະນຸດທີ່ມີຄວາມຮູ້ສຶກເຊັ່ນດຽວກັນກັບພວກທ່ານ. ຂ້າພະເຈົ້ານຳຂ່າວປະ
ເສີດມາ, ເພື່ອໃຫ້ພວກທ່ານກັບໃຈຈາກສິ່ງທີ່ບໍ່ມີປະໂຫຍດເຫລົ່ານີ້ ແລະ ກັບໄປຫາພຣະເຈົ້າຜູ້ຊົງພຣະຊົນຢູ່, ຜູ້ຊົງສ້າງຟ້າສະຫວັນ, ແຜ່ນດິນ
ໂລກ, ແລະທະເລ ແລະທຸກສິ່ງທີ່ມີຢູ່ໃນທີ່ເຫລົ່ານັ້ນ.[16]ໃນອະດີດທີ່ຜ່ານມາ, ພຣະອົງປ່ອຍໃຫ້ປະຊາຊາດຕ່າງໆ ປະຕິບັດຕາມທາງຂອງຕົນເອງ.
[17]ແຕ່ພຣະອົງຊົງບໍ່ໃຫ້ພຣະອົງເອງຂາດພະຍານ, ໃນການທີ່ພຣະອົງຊົງເຮັດສິ່ງທີ່ດີ ແລະ ບັນດານຝົນຕົກຈາກທ້ອງຟ້າໃຫ້ພວກທ່ານ ແລະ ໃຫ້ມີ
ຜົນລະປູກຕາມລະດູການ, ຊົງໂຜດໃຫ້ທ່ານອີ່ມດ້ວຍອາຫານການກິນ ແລະ ດ້ວຍຄວາມຍິນດີ.”[18]ເຖິງແມ່ນວ່າ ໂປໂລ ແລະ ບາຣະນາບາ ຈະ
ກ່າວຖ້ອຍຄຳເຫລົ່ານີ້, ກໍບໍ່ສາມາດຫ້າມຝູງຊົນບໍ່ໃຫ້ມາຖວາຍເຄື່ອງບູຊາແກ່ພວກທ່ານໄດ້.
[19]ພວກຢິວບາງຄົນມາຈາກເມືອງອັນຕີໂອເຂຍ ແລະ ເມືອງອີໂກນີອົນໄດ້ຊັກຊວນຝູງຊົນ. ພວກເຂົາເອົາກ້ອນຫີນແກວ່ງໃສ່ໂປໂລ ແລະ ລາກທ່ານ
ອອກໄປນອກເມືອງ, ໂດຍຄິດວ່າທ່ານຕາຍແລ້ວ.[20]ແຕ່ພວກສາວົກໄດ້ຢືນອ້ອມເພິ່ນໄວ້, ທ່ານກໍລຸກຂຶ້ນແລ້ວເຂົ້າໄປໃນເມືອງ. ມື້ຕໍ່ມາທ່ານໄປທີ່
ເມືອງ ເດຣະເບກັບບາຣະນາບາ.
[21]ຫລັງຈາກທີ່ທ່ານທັງສອງໄດ້ປະກາດຂ່າວປະເສີດໃນເມືອງນັ້ນ ແລະ ເຮັດໃຫ້ຄົນຈຳນວນຫລາຍມາເປັນສາວົກ, ທ່ານທັງສອງກໍກັບຄືນໄປ
ທີ່ເມືອງລີສະຕຣາ, ແລ້ວໄປທີ່ເມືອງ ອີໂກນີອົມ, ແລະເມືອງອັນຕີໂອເຂຍ.[22]ທ່ານທັງສອງເຮັດໃຫ້ຈິດໃຈຂອງພວກສາວົກເຂັ້ມແຂງຂຶ້ນ ແລະ ໜູນ
ໃຈພວກເຂົາໃຫ້ຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອ, ໂດຍກ່າວວ່າ, “ຂ້າພະເຈົ້າຕ້ອງອົດທົນຕໍ່ຄວາມທຸກຍາກລຳບາກຫລາຍປະການ ໃນການເຂົ້າໄປສູ່
ຣາຊອານາຈັກຂອງພຣະເຈົ້າ.”
[23]ເມື່ອທ່ານທັງສອງແຕ່ງຕັ້ງພວກຜູ້ປົກຄອງໃຫ້ກັບຄຣິສຕະຈັກໃນທຸກແຫ່ງແລ້ວ, ກໍອະທິຖານ ແລະ ຖືສິນອົດອາຫານ, ທ່ານທັງສອງພວກເຂົາໄວ້
ກັບອົງພຣະຜູ້ເປັນເຈົ້າ, ທີ່ພວກເຂົາເຊື່ອຢູ່ນັ້ນ.[24]ແລ້ວທ່ານທັງສອງກໍເດີນທາງຜ່ານແຂວງປີຊີເດຍ ມາເຖິງແຂວງປຳຟີເລຍ.[25]ເມື່ອທ່ານທັງສອງ
ກ່າວພຣະທຳໃນເມືອງເປກາແລ້ວ, ພວກທ່ານກໍລົງໄປທີ່ເມືອງ ອັດຕາເລຍ.[26]ຈາກທີ່ນັ້ນ ພວກທ່ານໄດ້ແລ່ນເຮືອມາທີ່ເມືອງອັນຕີໂອເຂຍ,
ເຊິ່ງເປັນເມືອງທີ່ມອບທ່ານທັງສອງໄວ້ໃນພຣະຄຸນຂອງພຣະເຈົ້າ ໃຫ້ເຮັດພາລະກິດນັ້ນທີ່ທ່ານທັງສອງໄດ້ເຮັດສຳເລັດແລ້ວ.
[27]ເມື່ອທ່ານທັງສອງມາຮອດເມືອງ ອັນຕີໂອເຂຍ ແລະ ໄດ້ປະຊຸມຮ່ວມກັນໃນຄຣິສຕະຈັກ, ທ່ານທັງສອງໄດ້ເລົ່າເຖິງທຸກສິ່ງທີ່ພຣະເຈົ້າຊົງໄດ້ເຮັດ
ກັບພວກທ່ານ, ແລະ ໃນການທີ່ພຣະອົງຊົງເປີດປະຕູແຫ່ງຄວາມເຊື່ອໃຫ້ກັບພວກຕ່າງຊາດ.[28]ພວກທ່ານອາໄສຢູ່ກັບພວກສາວົກເປັນເວລາດົນ
ນານ.


generated on Tue Jun 17 19:01:42 2025

15 [1]ບາງຄົນລົງໄດ້ມາຈາກແຂວງຢູດາຍ ເຖິງອັນຕີໂອກ ແລະ ໄດ້ສອນອ້າຍນ້ອງວ່າ,
"ຖ້າພວກທ່ານບໍ່ເຂົ້າພິທີຕັດຕາມທຳນຽມຂອງໂມເຊພວກທ່ານຈະພົ້ນບໍ່ໄດ້."[2]ຊຶ່ງໄດ້ເຮັດໃຫ້ໂປໂລ ແລະບາຣະນາບາໄດ້ພະເຊີນໜ້າ ແລະ
ໂຕ້ຖຽງກັບຄົນເຫລົ່ານັ້ນແລ້ວ. ດັ່ງນັ້ນໂປໂລ ແລະ ບາຣະນາບາ ແລະ ຄົນອື່ນໆບາງຄົນທ່າມກາງເຂົາ ຄວນຈະຂຶ້ນໄປກຸງເຢຣູຊາເລັມ
ເພື່ອໄປພົບກັບບັນດາອັກຄະສາວົກ ແລະ ຜູ້ອາວຸໂສກ່ຽວກັບເລື່ອງນີ້.

[3]ເພາະເຫດນີ້, ຄຣິສຕະຈັກຈຶ່ງສົ່ງທ່ານເຫລົ່ານັ້ນໄປ, ໃນຂະນະທີ່ເດີນທາງຜ່ານແຂວງໂຟນີເຊຍແລະ ແຂວງຊາມາເຣຍ
ແລະໄດ້ປະກາດເລື່ອງລາວຂອງພວກຕ່າງຊາດ. ພວກເຂົາໄດ້ເຮັດໃຫ້ພີ່ນ້ອງທຸກຄົນຊື່ນຊົມຍິນດີເປັນຢ່າງຍິ່ງ.
[4]ເມື່ອພວກເຂົາມາເຖິງກຸງເຢຣູຊາເລັມ, ຄຣິສຕະຈັກ ແລະພວກອັກຄະສາວົກ ແລະ ຜູ້ປົກຄອງກໍມາຕ້ອນຮັບທ່ານ
ແລ້ວພວກທ່ານໄດ້ເລົ່າທຸກສິ່ງທຸກຢ່າງທີ່ພຣະເຈົ້າຊົງກະທຳຮ່ວມກັບພວກເພິ່ນ.
[5]ແຕ່ມີບາງຄົນຢູ່ໃນພວກຟາຣີຊາຍຜູ້ທີ່ເຊື່ອ, ໄດ້ຢືນຂຶ້ນ ແລະ ກ່າວວ່າ "ມັນມີຄວາມຈຳເປັນທີ່ພວກເຂົາຕ້ອງເຂົ້າພິທີຕັດ ແລະ
ເພື່ອສັ່ງພວກເຂົາໃຫ້ປະຕິບັດຕາມກົດບັນຍັດຂອງໂມເຊ."[6]ດັ່ງນັ້ນພວກອັກຄະສາວົກ ແລະ
ຜູ້ປົກຄອງຈຶ່ງໄດ້ປະຊຸມກັນເພື່ອພິຈາລະນາໃນເລື່ອງນີ້."
[7]ຫລັງຈາກທີ່ໄດ້ໂຕ້ຖຽງກັນມາຫລາຍແລ້ວ, ເປໂຕຈຶ່ງຢືນຂຶ້ນ ແລະ ກ່າວກັບພວກເຂົາວ່າ "ພີ່ນ້ອງທັງຫລາຍ, ພວກທ່ານຮູ້ຢູ່ແລ້ວວ່ານານມາແລ້ວ
ພຣະເຈົ້າໄດ້ຊົງເລືອກ ຂ້າພະເຈົ້າທ່າມກາງພວກທ່ານ ເພື່ອທີ່ຈະໄດ້ກ່າວຖ້ອຍຄຳແຫ່ງຂ່າວປະເສີດໃຫ້ພວກຕ່າງຊາດຟັງ ແລະ ເຊື່ອ.
[8]ພຣະເຈົ້າຊົງຮູ້ໃຈມະນຸດ, ໄດ້ຊົງເປັນພະຍານໃຫ້ເຂົາດ້ວຍປະທານພຣະວິນຍານບໍຣິສຸດໃຫ້ແກ່ພວກເຂົາ,
ເໝືອນທີ່ຊົງປະທານໃຫ້ກັບພວກເຮົາ[9]ແລະ ພຣະອົງບໍ່ໄດ້ຖືວ່າມີຄວາມແຕກຕ່າງກັນລະວ່າງພວກເຮົາກັບພວກເຂົາ,
ໃນການຊຳລະໃຈຂອງພວກເຂົາດ້ວຍຄວາມເຊື່ອ."
[10]ເພາະສະນັ້ນ ບັດນີ້ເປັນຫຍັງພວກທ່ານຈຶ່ງທົດສອບພຣະເຈົ້າ, ໂດຍວາງພາລະອັນຫນັກໄວ້ເທິງຄໍຂອງພວກສາວົກ
ເຊິ່ງບັນພະບູລຸດຂອງພວກເຮົາ ຫລື ພວກເຮົາແບກບໍ່ໄຫວບໍ?[11]ແຕ່ເຮົາເຊື່ອວ່າ
ເຮົາຈະໄດ້ຮັບຄວາມພົ້ນໂດຍພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າ, ເຊັ່ນດຽວກັບພວກເຂົາ."
[12]ຄົນທັງຫລາຍກໍມິດງຽບ ໃນຂະນະທີ່ພວກເຂົາຟັງບາຣານາບາ ແລະ ໂປໂລໄດ້ເລົ່າເລື່ອງໝາຍສຳຄັນ ແລະ ການອັດສະຈັນຕ່າງໆ
ທີ່ພຣະເຈົ້າຊົງກະທຳທ່າມກາງຄົນຕ່າງຊາດໂດຍຜ່ານພວກເຂົາ.
[13]ຫລັງຈາກທີ່ພວກເພິ່ນກ່າວຈົບແລ້ວ, ຢາໂກໂບຈຶ່ງໄດ້ກ່າວວ່າ " ພີ່ນ້ອງທັງຫລາຍຂໍຈົ່ງຟັງຂ້າພະເຈົ້າ,[14]ຊີໂມນໄດ້ບອກວ່າພຣະເຈົ້າຜູ້ຊົງພຣະຄຸນ
ໄດ້ຊົງຊ່ວຍພວກຕ່າງຊາດຄັ້ງແລກ ເພື່ອທີ່ຈະນຳຊົນກຸ່ມໜຶ່ງອອກຈາກພວກເຂົາເພື່ອພຣະນາມຂອງພຣະອົງ.
[15]ຖ້ອຍຄຳຂອງຜູ້ທຳນວຍກໍໄດ້ສອດຄ່ອງກັບເລື່ອງນີ້, ດັ່ງທີ່ມີຄຳຂຽນໄວ້ວ່າ,[16]ພາຍຫລັງເຫດການເຫລົ່ານີ້, ເຮົາຈະກັບມາ
ແລະເຮົາຈະສ້າງຫໍເຕັນຂອງດາວິດ, ທີ່ພັງລົງຂຶ້ນມາໃໝ່ ເຮົາຈະຕັ້ງຂຶ້ນໃໝ່ ແລະ ຟື້ນຟູບ່ອນຫັກຫ້າງເພພັງຂອງມັນ,
[17]ເພື່ອຄົນທີ່ເຫລືອຢູ່ຈະສະແຫວງຫາອົງພຣະຜູ້ເປັນເຈົ້າ, ຮ່ວມກັບພວກຕ່າງຊາດທັງໝົດ ທີ່ອອກນາມຂອງເຮົາ.
'[18]ນີ້ແມ່ນສິ່ງທີ່ອົງພຣະຜູ້ເປັນເຈົ້າຊົງກ່າວ, ຜູ້ແຈ້ງເຫດການເຫລົ່ານີ້ ໃຫ້ຮູ້ຕັ້ງແຕ່ສະໄໝໂບຮານກ່າວໄວ້ຢ່າງນີ້.
[19]ເພາະເຫດນີ້, ຕາມຄວາມເຫັນຂອງຂ້າພະເຈົ້າ, ເຮົາບໍ່ຄວນເຮັດຄວາມລຳບາກໃຫ້ແກ່ພວກຕ່າງຊາດທີ່ຫັນກັບມາຫາພຣະເຈົ້າ.
[20]ແຕ່ໃຫ້ເຮົາຂຽນໄປເຖິງພວກເຂົາວ່າ ພວກເຮົາຕ້ອງເວັ້ນເສຍຈາກສິ່ງທີ່ເປັນມົນທິນຂອງຮູບເຄົາລົບ, ຈາກການຜິດສິນທຳທາງເພດ,
ແລະຈາກການກິນເນື້ອສັດທີ່ຖືກຫັກຄໍຕາຍ, ແລະ ຈາກການກິນເລືອດ.[21]ຕັ້ງແຕ່ສະໄໝບູຮານ
ອ່ານເລື່ອງຂອງໂມເຊໃນທຳມະສາລາທຸກວັນຊະບາໂຕ."
[22]ຈາກນັ້ນພວກອັກຄະສາວົກ ແລະ ພວກຜູ້ອາວຸໂສ, ລວມທັງທຸກຄົນໃນຄຣິສຕະຈັກທັງໝົດ ກໍເຫັນຊອບທີ່ຈະເລືອກຢູດາທີ່ເອີ້ນວ່າບາຣາຊັບບາ,
ແລະ ຊີລາ, ຜູ້ເປັນຄົນສຳຄັນຂອງຄຣິສຕະຈັກ, ແລະ ສົ່ງພວກເຂົາໄປຍັງເມືອງອັນທີໂອກພ້ອມກັບໂປໂລ ແລະ ບາຣານາບາ.
[23]ພວກເຂົາໄດ້ຂຽນວ່າ: "ຈາກບັນດາທ່ານອັກຄະສາວົກ ແລະ ຜູ້ອາວຸໂສ, ພີ່ນ້ອງຂອງທ່ານ, ຈົນເຖິງພີ່ນ້ອງຊາວຕ່າງຊາດໃນເມືອງອັນທີໂອກ,
ແຂວງຊີເຣຍ ແລະ ຊີລີເຊຍ: ສົ່ງຄຳທັກທາຍ!
[24]ເຮົາໄດ້ຍິນມາວ່າ ມີຄົນບາງຄົນຈາກພວກເຮົາ, ທີ່ເຮົາບໍ່ໄດ້ໃຫ້ຄຳສັ່ງເຊັ່ນນັ້ນໄປ ແລະ
ສ້າງຄວາມຫຍຸ້ງຍາກໃຫ້ແກ່ພວກທ່ານດ້ວຍຄຳສອນທີ່ເຮັດໃຫ້ຈິດວິນຍານຂອງພວກທ່ານໂສກເສົ້າ.[25]ເພື່ອຈະເປັນການດີ,
ຕໍ່ພວກເຮົາທຸກຄົນຈຶ່ງເຫັນພ້ອມກັນທີ່ຈະເລືອກບາງຄົນ ແລະ ເພື່ອສົ່ງພວກເຂົາໄປຫາພວກທ່ານ ພ້ອມກັບບາຣານາບາແລະ
ໂປໂລຜູ້ເປັນທີ່ຮັກຂອງເຮົາ,[26]ຄົນຜູ້ທີ່ຍອມສ່ຽງຊີວິດ ເພື່ອພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ພຣະເຈົ້າຂອງເຮົາ.
[27]ເພາະສະນັ້ນ ພວກເຮົາຈຶ່ງສົ່ງຢູດາ ກັບຊີລາມາ, ຜູ້ທີ່ຈະບອກເລື່ອງຄືກັນນີ້ກັບພວກທ່ານ ຕາມຄວາມເວົ້າຂອງພວກເຂົາ.
[28]ເພາະຈະເປັນການດີຕໍ່ພຣະວິນຍານບໍຣິສຸດ ແລະ ຕໍ່ພວກເຮົາ, ທີ່ຈະບໍ່ວາງພາລະໜັກໄວ້ບົນພວກທ່ານເກີນກວ່າສິ່ງທີ່ຈຳເປັນເຫລົ່ານີ້:
[29]ຄືໃຫ້ພວກທ່ານງົດເວັ້ນເສຍຈາກການກິນອາຫານທີ່ບູຊາຮູບເຄົາລົບ, ການກິນເລືອດ, ແລະ ການກິນສັດຕາຍທີ່ຖືກຮັດຄໍ ແລະ
ການຜິດສິນທຳທາງເພດ. ຖ້າພວກທ່ານລະເວັ້ນຈາກສິ່ງເຫລົ່ານີ້, ກໍຈະດີກັບພວກທ່ານ. ຂໍໃຫ້ເປັນສຸກເຖີດ"
[30]ເມື່ອພວກເຂົາລາຈາກກັນແລ້ວ, ທ່ານເຫລົ່ານັ້ນກໍລົງມາເມືອງອັນທີໂອກ; ຫລັງຈາກທີ່ໄດ້ປະຊຸມກັບຄົນທັງປ່ວງແລ້ວ,
ພວກເຂົາກໍມອບຈົດໝາຍສະບັບນັ້ນໃຫ້.[31]ເມື່ອພວກເຂົາໄດ້ອ່ານແລ້ວ, ພວກເຂົາກໍໄດ້ຊື່ນຊົມຍິນດີເພາະຄຳໜູນໃຈນັ້ນ.[32]ຢູດາກັບຊີລາ,
ເປັນຜູ້ປະກາດດ້ວຍກ່າວຄຳໜູນໃຈ ພີ່ນ້ອງດ້ວຍຖ້ອຍຄຳຫລາກຫລາຍ ແລະ ເຮັດໃຫ້ພວກເຂົາເຂັ້ມແຂງຂຶ້ນ.
[33]ຫລັງຈາກທີ່ພວກເຂົາໃຊ້ເວລາຊ່ວງໜຶ່ງທີ່ນັ້ນ, ພວກພີ່ນ້ອງກໍສົ່ງທັງສອງກັບມາຫາຄົນເຫລົ່ານັ້ນທີ່ສົ່ງພວກທ່ານໄປດ້ວຍສັນຕິສຸກ.[3435]ແຕ່ໂປໂລ
ແລະ ບາຣານາບາຍັງຄົງອາໄສຢູ່ໃນເມືອງອັນທີໂອເຂຍດ້ວຍກັນກັບຄົນອື່ນໆອີກຫລາຍຄົນ, ພວກເຂົາໄດ້ສັ່ງສອນ
ແລະປະກາດພຣະທັມຂອງພຣະຜູ້ເປັນເຈົ້າ.
[36]ຫລັງຈາກຫລາຍວັນຜ່ານໄປ ໂປໂລເວົ້າກັບບາຣານາບາວ່າ, "ໃຫ້ເຮົາກັບໄປກັນເທາະ ແລະ ຢ້ຽມຢາມອ້າຍນ້ອງໃນທຸກເມືອງ
ບ່ອນທີ່ເຮົາໄດ້ປະກາດພຣະທັມຂອງພຣະຜູ້ເປັນເຈົ້າ, ແລະ ເບິ່ງວ່າພວກເຂົາເປັນຢ່າງໃດ."[37]ບາຣານາບາ

ຕ້ອງການພາໂຢຮັນທີ່ມີຊື່ວ່າມາຣະໂກໄປດ້ວຍ.[38]ແຕ່ໂປໂລຄິດວ່າ ບໍ່ຄວນພາມາຣະໂກໄປ ເພາະເຂົາໄດ້ປະຖິ້ມພວກເພິ່ນ ໃນແຂວງປຳຟີເລຍ ແລະ ບໍ່ໄດ້ໄປເຮັດວຽກກັບພວກທ່ານອີກ.
[39]ແລ້ວມີການໂຕ້ຖຽງກັນຢ່າງຮຸນແຮງ, ຈົນພວກເຂົາຕ້ອງແຍກຈາກກັນ, ແລະ ບາຣານາບາ ຈຶ່ງໄດ້ພາມາຣະໂກລົງເຮືອໄປກັບເຂົາ ໄປຍັງເກາະໄຊປຣັດ.[40]ແຕ່ໂປໂລເລືອກຊີລາ ແລະ ອອກເດີນທາງໄປ,
ຫລັງຈາກທີ່ເຂົາໄດ້ມອບທ່ານທັງສອງໄວ້ໃນພຣະຄຸນຂອງອົງພຣະຜູ້ເປັນເຈົ້າແລ້ວ.[41]ທ່ານກໍເຂົ້າໄປຜ່ານ ແຂວງຊີເຣຍ ກັບແຂວງກີລີເກຍ, ກ່າວໜູນໃຈຄຣິສຕະຈັກໃຫ້ເຂັ້ມແຂງ.

 generated on Tue Jun 17 19:01:42 2025

16 [1]ໂປໂລມາຍັງເມືອງເດຣະເບ ກັບເມືອງລີສະຕຣາດ້ວຍ; ແລະຢູ່ທີ່ນີ້, ມີສາວົກຄົນໜຶ່ງຊື່ຕີໂມທຽວຢູ່ທີ່ນັ້ນ, ແມ່ຂອງເຂົາເປັນຜູ້ເຊື່ອຊາວຢິວ;
ພໍ່ຂອງເຂົາເປັນຊາວກຣີກ.[2]ຕີໂມທຽວມີຊື່ສຽງດີໃນພີ່ນ້ອງທີ່ຢູ່ໃນເມືອງລີສະຕຣາ ແລະເມືອງອີໂກນີໂອມ.
[3]ໂປໂລຕ້ອງການຕີໂມທຽວເດີນທາງໄປກັບທ່ານ; ດັ່ງນັ້ນທ່ານຈຶ່ງໃຫ້ເຂົາເຂົ້າພິທີຕັດ, ເພາະເຫັນແກ່ພວກຢິວທີ່ຢູ່ໃນເມືອງເຫລົ່ານັ້ນ,
ເພາະພວກເຂົາທຸກຄົນຮູ້ວ່າພໍ່ຂອງເຂົາເປັນຊາວກຣີກ.

[4]ຂະນະທີ່ພວກທ່ານເດີນທາງໄປຕາມເມືອງຕ່າງໆ, ໃນລະຫວ່າງທາງ
ພວກທ່ານໄດ້ສົ່ງຄຳສັ່ງທີ່ພວກອັກຄະສາວົກແລະພວກຜູ້ປົກຄອງໃນກຸງເຢຣູຊາເລັມໄດ້ຂຽນໄວ້, ໃຫ້ແກ່ຄຣິສຕະຈັກທັງຫລາຍ
ເພື່ອໃຫ້ພວກເຂົາປະຕິບັດຕາມ.[5]ເພາະເຫດນີ້ ຄຣິສຕະຈັກຈຶ່ງເຂັ້ມແຂງຂຶ້ນໃນຄວາມເຊື່ອ ແລະມີຄົນເພີ່ມຂຶ້ນໃນທຸກໆວັນ.
[6]ໂປໂລແລະພວກຂອງທ່ານເດີນທາງໄປທົ່ວເຂດແຂວງຟີເຄຍແລະແຂວງຄາລາເຕຍ,
ເນື່ອງຈາກພຣະວິນຍານບໍລິສຸດເຈົ້າຊົງຫ້າມພວກທ່ານບໍ່ໃຫ້ປະກາດພຣະທຳໃນແຂວງເອເຊຍ.[7]ເມື່ອພວກທ່ານມາໃກ້ແຂວງມີເຊຍແລ້ວ,
ພວກທ່ານກໍພະຍາຍາມເຂົ້າໄປຍັງແຂວງບີທີເນຍ, ແຕ່ພຣະວິນຍານຂອງພຣະເຢຊູຊົງຍັບຍັ້ງພວກທ່ານໄວ້.[8]ດັ່ງນັ້ນ,
ພວກທ່ານຈຶ່ງເດີນທາງຜ່ານແຂວງມີເຊຍລົງມາຍັງເມືອງໂທອາດ.
[9]ໂປໂລໄດ້ເຫັນນິມິດໃນຕອນກາງຄືນ: ມີຊາຍຊາວມາເກໂດເນຍຄົນຫນຶ່ງຢືນຢູ່ທີ່ນັ້ນຮ້ອງທ່ານ, ແລ້ວກ່າວວ່າ,
"ຂໍມາຊ່ວຍເຮົາໃນແຂວງມາເກໂດເນຍດ້ວຍ."[10]ເມື່ອໂປໂລເຫັນນິມິດນັ້ນແລ້ວ, ເຮົາກໍອອກເດີນທາງໄປຍັງແຂວງມາເກໂດເນຍທັນທີ,
ຕາມທີ່ພຣະເຈົ້າຊົງຮ້ອງເຮົາໄປປະກາດຂ່າວປະເສີດກັບຄົນເຫລົ່ານັ້ນ.
[11]ເມືອງໂທອາດມຸ່ງຕົງໄປຍັງເມືອງຊາໂມທາເກ, ແລະວັນຮຸ່ງຂຶ້ນ ເຮົາກໍມາເຖິງເມືອງເນອາໂປລີ, ແລະວັນຕໍ່ມາກໍເຖິງເມືອງ ເນອາໂປລີ.[12]ຈາກທີ່ນັ້ນ
ເຮົາກໍເດີນທາງໄປຍັງເມືອງຟີລິບປອຍ, ເປັນເມືອງທີ່ສຳຄັນທີ່ສຸດໃນເຂດແຂວງມາເກໂດເນຍ, ແລະເມືອງຂຶ້ນຂອງຊາວໂຣມ,
ເຮົາຈຶ່ງອາໄສຢູ່ໃນເມືອງນີ້ເປັນເວລາຫລາຍວັນ.[13]ໃນວັນຊະບາໂຕ ເຮົາອອກໄປທີ່ປະຕູເມືອງທີ່ຢູ່ແຄມແມ່ນ້ຳ,
ທີ່ເຮົາຄິດວ່າຈະມີສະຖານທີ່ສຳລັບອະທິຖານ. ເຮົາຈຶ່ງນັ່ງສົນທະນາກັບພວກຜູ້ຍິງທີ່ພາກັນມາ.
[14]ຜູ້ຍິງຄົນໜຶ່ງຊື່ລີເດຍ, ເປັນຄົນຂາຍຜ້າສີມ່ວງທີ່ມາຈາກເມືອງທົວເຕຣາ, ເປັນຜູ້ທີ່ຢຳເກງພຣະເຈົ້າໄດ້ຟັງເຮົາຢູ່, ອົງພຣະຜູ້ເປັນເຈົ້າ,
ໄດ້ເປີດໃຈຂອງນາງໃຫ້ສົນໃຈຖ້ອຍຄຳທີ່ໂປໂລເວົ້າ.[15]ເມື່ອນາງແລະຄອບຄົວຂອງນາງຮັບບັບຕິສະມາ, ແລ້ວນາງກໍຂໍຮ້ອງເຮົາວ່າ,
"ຖ້າພວກທ່ານເຫັນຂ້າພະເຈົ້າເປັນຄົນສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າແລ້ວ, ຂໍເຊີນພວກທ່ານມາທີ່ບ້ານຂອງຂ້າພະເຈົ້າແລະພັກຢູ່ທີ່ນັ້ນເຖີດ."
ແລະນາງກໍຊັກຊວນພວກເຮົາ.
[16]ຕໍ່ມາຂະນະທີ່ກຳລັງໄປຍັງທີ່ສຳລັບອະທິຖານແຫ່ງໜຶ່ງ, ມີຍິງສາວຄົນໜຶ່ງມີວິນຍານໝໍດູເຂົ້າສິງໄດ້ມາພົບກັບເຮົາ
ນາງເຮັດໃຫ້ພວກເຈົ້ານາຍຂອງນາງໄດ້ເງິນຢ່າງຫລວງຫລາຍໂດຍການທຳນວາຍ.[17]ຜູ້ຍິງຄົນນີ້ເດີນຕາມໂປໂລກັບເຮົາໄປ, ຮ້ອງຂຶ້ນວ່າ,
"ຄົນເຫລົ່ານີ້ເປັນຜູ້ຮັບໃຊ້ຂອງພຣະເຈົ້າອົງສູງສຸດ.
ທ່ານເຫລົ່ານີ້ມາປະກາດທາງແຫ່ງຄວາມຣອດພົ້ນໃຫ້ກັບພວກທ່ານ."[18]ນາງເຮັດແບບນີ້ເປັນເວລາຫລາຍມື້. ຈົນໂປໂລຮູ້ສຶກລຳຄານນາງຫລາຍ,
ຈຶ່ງຫັນໄປສັ່ງກັບວິນຍານນັ້ນວ່າ, "ຂ້າສັ່ງເຈົ້າໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ໃຫ້ອອກໄປຈາກນາງດຽວນີ້."
ແລ້ວວິນຍານຊົ່ວນັ້ນກໍອອກໄປທັນທີ.
[19]ເມື່ອພວກເຈົ້ານາຍຂອງນາງເຫັນວ່າໝົດຫວັງທີ່ຈະໄດ້ເງິນອີກແລ້ວ, ພວກເຂົາຈຶ່ງຈັບໂປໂລກັບສີລາ
ແລະລາກມາຍັງທີ່ວ່າການເມືອງຢູ່ຕໍ່ໜ້າພວກເຈົ້າໜ້າທີ່.[20]ເມື່ອເຂົາໄດ້ພານາງທັງສອງມາເຖິງເຈົ້າໜ້າທີ່ປົກຄອງແລ້ວກ່າວວ່າ,
"ຄົນເຫລົ່ານີ້ເປັນພວກຢິວ, ແລະກຳລັງເຮັດຄວາມຫຍຸ້ງຍາກໃຫ້ກັບເມືອງນີ້.[21]ພວກເຂົາສັ່ງສອນສິ່ງທີ່ຕ້ອງຫ້າມສຳຫລັບເຮົາ
ທີ່ເປັນຊາວໂຣມທີ່ບໍ່ຄວນຈະຮັບຫລືປະຕິບັດເລີຍ."
[22]ຝ່າຍປະຊາຊົນກໍຮ່ວມໃຈກັນໂຈມຕີໂປໂລ ແລະ ຊີລາດ້ວຍ; ສ່ວນພວກເຈົ້າໜ້າທີ່ປົກຄອງກໍຈີກເສື້ອຜ້າຂອງທ່ານທັງສອງອອກ ແລະ
ສັ່ງໃຫ້ຂ້ຽນພວກທ່ານດ້ວຍໄມ້.[23]ເມື່ອພວກເຂົາໄດ້ຂ້ຽນພວກທ່ານໄປຫລາຍທີ, ພວກເຂົາກໍຈັບທ່ານທັງສອງເຂົ້າໄປໃນຄຸກ ແລະ
ໄດ້ອອກຄຳສັ່ງໃຫ້ນາຍຄຸກໃຫ້ເບິ່ງຢ່າງເຂັ້ມງວດ.[24]ຫລັງຈາກໄດ້ຮັບຄຳສັ່ງ, ນາຍຄຸກກໍຈັບພວກເຂົາໄປຂັງໄວ້ໃນຄຸກຊັ້ນໃນ
ແລະເອົາຕີນຂອງພວກເຂົາໃສ່ຂື່ໄມ້ໃຫ້ແໜ້ນ.
[25]ເວລາປະມານທ່ຽງຄືນ ຂະນະໂປໂລກັບຊີລາອະທິຖານ ແລະຮ້ອງເພງສັນລະເສີນພຣະເຈົ້າ, ແລະພວກນັກໂທດຄົນອື່ນໆ ກຳລັງຟັງຢູ່.
[26]ໃນທັນໃດນັ້ນກໍເກີດແຜ່ນດິນໄຫວຢ່າງຮຸນແຮງຈົນຮາກຖານຄຸກສະເທືອນ; ແລະປະຕູຄຸກກໍເປີດອອກທຸກບານ, ໂສ້ກໍຫລຸດອອກຈາກທຸກຄົນ.
[27]ນາຍຄຸກກໍຕື່ນຂຶ້ນມາເບິ່ງເຫັນປະຕູຄຸກເປີດອອກ; ເຂົາຊັກດາບຂຶ້ນມາເພື່ອຈະຂ້າຕົວຕາຍ, ເພາະຄິດວ່ານັກໂທດໜີໄປໝົດແລ້ວ.
[28]ແຕ່ໂປໂລກໍຮ້ອງສຽງດັງວ່າ, "ຢ່າທຳຮ້າຍຕົວເອງເລີຍ ເພາະທຸກຄົນຍັງຢູ່ທີ່ນີ້."
[29]ນາຍຄຸກຈຶ່ງຮ້ອງໃຫ້ຈຸດໄຟມາແລ້ວຮີບເຂົ້າໄປໃນຄຸກເຄົ້າລົງ, ຕົວສັ່ນ, ດ້ວຍຄວາມຢ້ານຕໍ່ໜ້າໂປໂລກັບສີລາ,[30]ພາທ່ານທັງສອງອອກມາ
ແລ້ວກ່າວວ່າ, "ທ່ານເຈົ້າຂ້າ, ຂ້າພະເຈົ້າຕ້ອງເຮັດສິ່ງໃດຈະໄດ້ຮັບຄວາມຣອດພົ້ນໄດ້?"[31]ທ່ານທັງສອງກ່າວວ່າ, "ຈົ່ງເຊື່ອໃນອົງພຣະເຢຊູເຈົ້າ,
ແລ້ວທ່ານຈະລອດພົ້ນທັງທ່ານແລະຄອບຄົວຂອງທ່ານ."
[32]ທ່ານທັງສອງຈຶ່ງກ່າວພຣະທຳຂອງອົງພຣະຜູ້ເປັນເຈົ້າ, ໃຫ້ນາຍຄຸກກັບທຸກຄົນທີ່ມາຢູ່ຮ່ວມໃນບ້ານຂອງເຂົາຟັງ.
[33]ໃນຊົ່ວໂມງດຽວກັນຂອງຄືນນັ້ນ, ນາຍຄຸກໄດ້ພາທ່ານທັງສອງໄປລ້າງບາດແຜ, ແລ້ວເຂົາທຸກຄົນໃນຄອບຄົວກໍຮັບບັບຕິສະມາທັນທີ.
[34]ເຂົາພາໂປໂລກັບຊີລາໄປຍັງທີ່ບ້ານຂອງເຂົາ ແລ້ວຈັດອາຫານມາລ້ຽງພວກທ່ານ, ເຂົາກັບທຸກຄົນໃນຄອບຄົວຊື່ນຊົມຍິນດີ,
ເພາະພວກເຂົາທຸກຄົນເຊື່ອໃນພຣະເຈົ້າແລ້ວ.
[35]ເມື່ອເຖິງວັນຮຸ່ງຂຶ້ນ, ພວກເຈົ້າໜ້າທີ່ປົກຄອງຈຶ່ງໃຊ້ຄົນມາບອກພວກຍາມວ່າ,
"ຈົ່ງປ່ອຍຄົນເຫລົ່ານັ້ນໄປ."[36]ນາຍຄຸກຈຶ່ງບອກຖ້ອຍຄຳເຫລົ່ານັ້ນແກ່ໂປໂລວ່າ,
"ເຈົ້າໜ້າທີ່ປົກຄອງໃຊ້ຄົນມາບອກຂ້າພະເຈົ້າໃຫ້ປ່ອຍຕົວທ່ານທັງສອງໄປ: ເພາະສະນັ້ນ ຂໍໃຫ້ພວກທ່ານອອກມາ, ແລະໄປດ້ວຍສັນຕິສຸກເຖີດ."
[37]ແຕ່ໂປໂລບອກກັບພວກເຂົາວ່າ, "ພວກເຂົາຂ້ຽນເຮົາ ທີ່ເປັນຄົນສັນຊາດໂຣມຕໍ່ໜ້າຄົນທັງຫລາຍ ແລະ ຈັບເຮົາຂັງໄວ້ໃນຄຸກ ແລະຕອນນີ້
ພວກເຂົາຈະໄລ່ເຮົາອອກໄປຢ່າງປິດລັບບໍ? ເຮັດຢ່າງນັ້ນບໍ່ໄດ້

 generated on Tue Jun 17 19:01:42 2025

ຂໍໃຫ້ພວກເຂົາມາພາເຮົາອອກໄປເອງເຖີດ"[38]ແລ້ວພວກຍາມຈຶ່ງລາຍງານຖ້ອຍຄຳເຫລົ່ານີ້ຕໍ່ເຈົ້າໜ້າທີ່ປົກຄອງ ພວກເຈົ້າໜ້າທີ່ປົກຄອງກໍຢ້ານ
ເມື່ອໄດ້ຍິນໂປໂລກັບສີລາເປັນຊາວໂຣມ[39]ພວກເຈົ້າໜ້າທີ່ປົກຄອງຈຶ່ງມາຂໍຮ້ອງທ່ານທັງສອງອອກຈາກຄຸກແລ້ວ
ພວກເຂົາກໍຂໍໂປໂລກັບສີລາອອກຈາກເມືອງໄປ.
[40]ໂປໂລກັບສີລາອອກຈາກຄຸກແລ້ວ ກໍມາທີ່ບ້ານຂອງລີເດຍ. ເມື່ອໂປໂລກັບຊີລາໄດ້ພົບກັບພີ່ນ້ອງແລ້ວ, ທ່ານທັງສອງກ່າວໜູນໃຈພວກເຂົາ
ແລ້ວເດີນທາງອອກຈາກເມືອງນັ້ນ.

17 1ເມື່ອໂປໂລກັບຊີລາເດີນທາງຜ່ານເມືອງອຳຟີໂປລີ ແລະເມືອງອາໂປໂລນີ, ທ່ານທັງສອງກໍມາເຖິງເມືອງເທສະໂລນິກ,
ທີ່ນັ້ນມີທຳມະສາລາຂອງພວກຢິວ.2ໂປໂລ, ຈຶ່ງເຂົ້າໄປໃນທຳມະສາລາທີ່ເຮັດເປັນປະຈຳ, ແລະ
ທ່ານໄດ້ສົນທະນາໂຕ້ຕອບກັບພວກເຂົາຈາກພຣະຄຳພີເປັນເວລາສາມວັນຊະບາໂຕ.

3ທ່ານເປີດພຣະຄຳພີ ແລະອະທິບາຍວ່າ ຈຳເປັນທີ່ພຣະຄຣິດຕ້ອງທົນທຸກ ແລະເປັນຂຶ້ນມາຈາກຄວາມຕາຍ ທ່ານກ່າວວ່າ,
"ພຣະເຢຊູອົງນີ້ທີ່ຂ້ານ້ອຍປະກາດກັບທ່ານຄືພຣະຄຣິດ."4ພວກຢິວບາງຄົນເຫັນດ້ວຍ ແລະ ເຂົ້າຮ່ວມກັບໂປໂລ ແລະຊີລາ,
ຮ່ວມທັງຊາວກຣີກທີ່ນັບຖືພຣະເຈົ້າ, ແລະ ສະຕຣີທີ່ເປັນຄົນສຳຄັນຫລາຍຄົນ ແລະ ຜູ້ຄົນຈຳນວນຫລວງຫລາຍ.
5ແຕ່ພວກຢິວໄດ້ຄິດເຫິງສາ, ໄປຄົບຄິດກັບຄົນພານຕາມຕະຫລາດ ຮວບຮວມກັນມາຢ່າງຫລວງຫລາຍກໍການອົນລະຫົ່ນວຸ້ນວາຍຂຶ້ນໃນເມືອງ,
ແລ້ວເຂົ້າບຸກລຸກເຮືອນຂອງຢາໂຊນ ພະຍາຍາມຈະນຳເອົາທັງສອງອອກມາໃຫ້ປະຊາຊົນ.6ເມື່ອບໍ່ພົບເຂົາຈຶ່ງລາກເອົາຢາໂຊນກັບພີ່-
ນ້ອງລາງຄົນໄປຫາຜູ້ປົກຄອງເມືອງນັ້ນ ແລະຮ້ອງຂຶ້ນວ່າ, “ຄົນເຫລົ່ານີ້ເປັນພວກຂວ້ໍາໂລກມະນຸດໄດ້ມາທີ່ນີ້.7ແລ້ວຢາໂຊນໄດ້ຮັບຕ້ອນເຂົາໄວ້
ແລະ ບັນດາຄົນເຫລົ່ານີ້ໄດ້ເຮັດຜິດຕໍ່ຂໍ້ດຳລັດຂອງກາຍຊາ ໂດຍກ່າວວ່າ, “ມີກະສັດອີກອົງໜຶ່ງຄືເຢຊູ."
8ດ້ວຍຂໍ້ຄວາມນັ້ນພວກຢິວໄດ້ເຮັດໃຫ້ປະຊາຊົນກັບພວກຜູ້ປົກຄອງຮ້ອນໃຈຂຶ້ນ.
9ແຕ່ຫລັງຈາກທີ່ພວກເຂົາຮ້ອງຄ່າປະກັນຕົວຈາກຢາຊົນແລະຄົນອື່ນໆ ແລ້ວກໍປ່ອຍພວກເຂົາໄປ.
10ຄືນນັ້ນ ພວກພີ່ນ້ອງຈຶ່ງສົ່ງໂປໂລກັບຊີລາໄປຍັງເມືອງເບເຣຍ. ເມື່ອທ່ານທັງສອງໄປເຖິງທີ່ນັ້ນ, ພວກທ່ານກໍເຂົ້າໄປໃນທຳມະສາລາຂອງພວກຢິວ.
11ພວກຢິວເຫລົ່ານີ້ມີຈິດໃຈສູງກວ່າພວກຢິວໃນເມືອງເທສະໂລນິກ, ເພາະເຂົາພ້ອມຮັບພຣະເຈົ້າດ້ວຍສຸດໃຈ, ແລະ ຄົ້ນເບິ່ງພຣະຄຳພີທຸກວັນ
ເພື່ອທີ່ຈະເບິ່ງຂໍ້ຄວາມເຫລົ່ານີ້ເປັນເຊັ່ນນັ້ນຫລື.12ດ້ວຍເຫດນີ້ ຈຶ່ງມີຫລາຍຄົນໃນພວກເຂົາເຊື່ອ, ຮ່ວມທັງພວກສະຕຣີມີສັກ
ແລະຜູ້ຊາຍຊາວກຣີກອີກຫລາຍຄົນ.
13ແຕ່ເມື່ອພວກຢິວໃນເມືອງເທສະໂລນິກຮູ້ວ່າ ໂປໂລໄດ້ປະກາດສັ່ງສອນພຣະທັມຂອງພຣະເຈົ້າທີ່ເມືອງເບເຣຍ,
ພວກເຂົາຈຶ່ງໄປທີ່ນັ້ນແລະຍຸຍົງແລະເຮັດໃຫ້ຝູງຊົນວຸ້ນວາຍໃຈ.14ພວກພີ່ນ້ອງຈຶ່ງສົ່ງໂປໂລອອກໄປທາງທະເລທັນທີ,
ແຕ່ຊີລາກັບໂມທຽວຍັງຢູ່ທີ່ນັ້ນ.15ພວກຄົນທີ່ໄປສົ່ງໂປໂລເຫລົ່ານັ້ນກໍພາທ່ານໄປຍັງເມືອງອາແຖນ, ໃນຂະນະພວກເຂົາຈະລະໂປໂລໄວ້ທີ່ນັ້ນ
ພວກເຂົາກໍຄຳສັ່ງຈາກຊີລາກັບໂມທຽວໃຫ້ຮີບໄປຫາທ່ານໂດຍໄວເທົ່າທີ່ຈະໄປໄດ້.
16ຂະນະທີ່ໂປໂລລໍຖ້າພວກເຂົາຢູ່ໃນກຸງອາແທນ, ວິນຍານຂອງເພິ່ນກໍຮຸ່ມຮ້ອນຢູ່ພາຍໃນ ເມື່ອເພິ່ນເບິ່ງເຫັນກຸງນັ້ນເຕັມໄປດ້ວຍຮູບເຄົາລົບ.
17ດັ່ງນັ້ນ ເພິ່ນຈຶ່ງສົນທະນາໂຕ້ຕອບກັບພວກຢິວ ແລະບັນດາຄົນທີ່ນັບຖືພຣະເຈົ້າ, ໃນທຳມະສາລານັ້ນ ແລະ
ຄົນເຫລົ່ານັ້ນທີ່ທ່ານພົບໃນຕະຫລາດທຸກວັນດ້ວຍ.
18ມີນັກປາດລາງຄົນໃນພວກເອປີກູຣຽວແລະໃນພວກສະໂຕອີໂກໄດ້ມາພົບທ່ານ ລາງຄົນກ່າວວ່າ, “ຄົນເກັບເລັມຄວາມຮູ້ຜູ້ນີ້ຢາກ ເວົ້າອັນໃດ”
ລາງຄົນກ່າວວ່າ “ເໝືອນເປັນຜູ້ປະກາດພະຕ່າງດ້າວ” ເພາະໂປໂລປະກາດຂ່າວປະເສີດ ເລື່ອງພຣະເຢຊູແລະການຄືນມາຈາກຕາຍ.
19ພວກເຂົາຈຶ່ງພາໂປໂລໄປຍັງສະພາອາເລໂອປາໂຂ, ແລ້ວກ່າວວ່າ, "ເຮົາຮູ້ຂໍຄຳສອນໃໝ່ທີ່ທ່ານກ່າວຢູ່ໄດ້ຫລືບໍ່?
20ເພາະທ່ານນຳເລື່ອງປະລາດມາເຖິງຫູເຮົາ. ເພາະສະນັ້ນ,
ເຮົາຈຶ່ງຢາກຮູ້ວ່າເລື່ອງລາວເຫລົ່ານີ້ມີໝາຍຄວາມວ່າຢ່າງໃດ."21(ຊາວເມືອງອາແຖນ ແລະຄົນຕ່າງແດນທີ່ອາໄສຢູ່ທີ່ນັ້ນ
ບໍ່ໃຊ້ເວລາເຮັດກັບສິ່ງອື່ນໃດ ນອກຈາກຈະກ່າວ ຫລືຟັງສິ່ງໃໝ່ໆ.)
22ໂປໂລຈຶ່ງຢືນຂຶ້ນກາງສະພາອາເລໂອປາໂຂ ແລ້ວກ່າວວ່າ, "ທ່ານທັງຫລາຍທີ່ເປັນຊາວອາແຖນ,
ຂ້າພະເຈົ້າເຫັນວ່າພວກທ່ານເປັນຄົນປະຕິບັດສາດສະນາໃນທຸກດ້ານ.
23ເພາະຂະນະທີ່ຂ້າພະເຈົ້າເດີນໄປຕາມທາງແລະໄດ້ສັງເກດສິ່ງທີ່ພວກທ່ານນະມັດສະການ, ຂ້າພະເຈົ້າພົບທ່ອນໜຶ່ງທີ່ມີຄຳຈາລຶກໄວ້ວ່າ,
"ແດ່ພຣະເຈົ້າທີ່ບໍ່ຮູ້ຈັກ." ເພາະສະນັ້ນ ຂ້າພະເຈົ້າຈຶ່ງມາປະກາດພວກທ່ານເຖິງສິ່ງທີ່ທ່ານນະມັດສະການດ້ວຍຄວາມບໍ່ຮູ້.
24ແຕ່ເນື່ອງຈາກພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າແຫ່ງຟ້າສະຫວັນແລະແຜ່ນດິນໂລກ, ຜູ້ບໍ່ໄດ້ຊົງສະຖິດໃນພຣະວິຫານທີ່ສ້າງດ້ວຍມືມະນຸດ.
25ພຣະອົງບໍ່ຕ້ອງມີມືມະນຸດມາປົ້ນນິບັດຮັບໃຊ້ລາວກັບວ່າພຣະອົງຊົງປະສົງສິ່ງໃດ,
ເພາະພຣະອົງເອງເປັນຜູ້ປະທານຊີວິດແລະລົມຫາຍໃຈແກ່ຄົນທັງປ່ວງແລະສິ່ງສາລະພັດ.
26ພຣະອົງຊົງສ້າງທຸກຊົນຊາດມາຈາກຊາຍຄົນດຽວໃຫ້ມີຊີວິດໃຫ້ຢູ່ທົ່ວພື້ນແຜ່ນດິນໂລກ,
ຜູ້ຊົງກຳນົດລະດູການແລະເຂດແດນໃຫ້ພວກເຂົາອາໄສຢູ່,27ເພາະເຫດນີ້ ພວກເຂົາຈຶ່ງຄວນສະແຫວງຫາພຣະເຈົ້າ,
ເພື່ອທີ່ພວກເຂົາອາດຈະເຂົ້າໄປເຖິງແລະພົບພຣະອົງ. ອັນທີ່ຈິງແລ້ວ ພຣະອົງບໍ່ໄດ້ຊົງຢູ່ຫ່າງໄກຈາກຄົນໃດໃນພວກເຮົາເລີຍ.
28ເພາະເຮົາມີຊີວິດແລະເຄື່ອນໄຫວໃນພຣະອົງ, ດັ່ງທີ່ນັກແຕ່ງກອນໃນພວກທ່ານໄດ້ກ່າວວ່າ,
'ເພາະເຮົາທັງຫລາຍເປັນເຊື້ອສາຍຂອງພຣະອົງ.'29ດ້ວຍເຫດນີ້ ເມື່ອເຮົາເປັນເຊື້ອສາຍຂອງພຣະເຈົ້າ,
ເຮົາກໍບໍ່ຄວນຄິດວ່າຄວາມເປັນພຣະເຈົ້າເປັນເໝືອນກັບທອງຄຳຫລືເງິນ, ຫລື ກ້ອນຫີນ ທີ່ສ້າງຂຶ້ນຈາກສິນລະປະແລະຄວາມຄິດຂອງມະນຸດ.
30ເພາະສະນັ້ນ ພຣະເຈົ້າຈຶ່ງບໍ່ຊົງຖືໂທດໃນເວລາທີ່ມະນຸດຂາດຄວາມຮູ້, ແຕ່ບັດນີ້
ພຣະເຈົ້າຊົງບັນຊາໃຫ້ມະນຸດທຸກຄົນທົ່ວທຸກແຫ່ງໃຫ້ກັບໃຈໃໝ່.
31ເພາະພຣະອົງໄດ້ຊົງກຳນົດວັນໜຶ່ງໄວ້ແລ້ວເປັນເວລາທີ່ພຣະອົງຈະຊົງພິພາກສາໂລກໃນຄວາມຊອບທຳ. ໂດຍຄົນທີ່ພຣະອົງທີ່ເລືອກໄວ້ແລ້ວ
ພຣະເຈົ້າຊົງຮັບຮອງຊາຍຄົນຕໍ່ໜ້າທຸກຄົນ ໂດຍການໃຫ້ພຣະອົງເປັນຂຶ້ນມາຈາກຄວາມຕາຍ.
32ເມື່ອຊາວອາແທນໄດ້ຍິນເລື່ອງລາວຂອງການເປັນຂຶ້ນຈາກຄວາມຕາຍ, ບາງຄົນກໍຫົວຂວັນໂປໂລ; ແຕ່ບາງຄົນກ່າວວ່າ,
"ເຮົາຈະຟັງທ່ານກ່າວເລື່ອງນີ້ອີກ."33ຫລັງຈາກນັ້ນ, ໂປໂລກໍຈາກພວກເຂົາໄປ.34ແຕ່ມີຊາຍບາງຄົນເຂົ້າຮ່ວມກັບໂປໂລແລະເຊື່ອ,
ຮ່ວມທັງດີໂອນີຊີໂອ ສະມາຊິກສະພາອາເຣໂອປາໂກ, ກັບຜູ້ຍິງຄົນໜຶ່ງຊື່ ດາມາຣີ, ແລະຄົນອື່ນໆ ທີ່ຢູ່ກັບພວກເຂົາ.

18 [1]ຫລັງຈາກເຫດການເຫລົ່ານັ້ນ ໂປໂລກໍອອກຈາກກຸງອາແຖນໄປຍັງເມືອງໂກຣິນໂທ.[2]ທີ່ນັ້ນທ່ານໄດ້ພົບກັບຊາວຢິວຄົນໜຶ່ງຊື່ ອາກີລາ,
ທີ່ເກີດໃນແຂວງປົນໂຕ ຜູ້ທີ່ຫາມາຈາກປະເທດອິດຕາລີ ກັບເມຍຂອງເພິ່ນຊື່ປີຊະກີລາ,
ເພາະຈັກກະພັດກະລາວດີໂອໄດ້ມີຄຳສັ່ງໃຫ້ພວກຊາວຢິວທັງໝົດອອກໄປຈາກກຸງໂຣມ ແລ້ວໂປໂລໄດ້ມາຫາພວກເຂົາ.[3]ໂປໂລໄດ້ອາໄສ, ແລະ
ເຮັດວຽກງານກັບພວກເຂົາ, ເພາະພວກເຂົາເຮັດວຽກງານຢ່າງດຽວກັນ, ພວກເຂົາເປັນຊ່າງເຮັດຜ້າເຕັນ.

[4]ໂປໂລສົນທະນາໂຕ້ຕອບກັນໃນທຳມະສາລາທຸກວັນສະບາໂຕ. ທ່ານຊັກຊວນທັງພວກຢິວແລະພວກກຣີກໃຫ້ເຊື່ອ.
[5]ແຕ່ເມື່ອຊີລາກັບຕີໂມທຽວກັບມາຈາກແຂວງມາເກໂດເນຍແລ້ວ,
ພຣະວິນຍານບໍລິສຸດກໍກ່າວສັ່ງໃຫ້ໂປໂລເປັນພະຍານກັບພວກຢິວວ່າພຣະເຢຊູຄືພຣະຄຣິດ.[6]ເມື່ອພວກຢິວຕໍ່ຕ້ານ ແລະກ່າວຄຳຢາບຊ້າຕໍ່ທ່ານ,
ແລະ ໂປໂລກໍສະບັດເສື້ອຜ້າຂອງທ່ານໄປທີ່ພວກເຂົາກ່າວວ່າ, "ໂທດທີ່ທ່ານຕ້ອງຕາຍນັ້ນ ທ່ານເອງຕ້ອງຮັບຜິດຊອບ; ຂ້າພະເຈົ້າບໍ່ມີໂທດແລ້ວ.
ຕັ້ງແຕ່ນີ້ໄປ ຂ້າພະເຈົ້າຈະໄປຫາພວກຕ່າງຊາດ."
[7]ເມື່ອທ່ານຈາກທີ່ນັ້ນໄປແລ້ວ ກໍໄປທີ່ບ້ານຂອງຊາຍຄົນໜຶ່ງຊື່ຕີໂຕຍູຊະໂຕ, ເປັນຄົນທີ່ນັບຖືພຣະເຈົ້າ. ບ້ານຂອງເຂົາຕິດກັບທຳມະສາລາ.
[8]ກີສະໂປ, ເປັນຜູ້ນຳທຳມະສາລາ, ກັບທັງຄົວເຮືອນຂອງທ່ານໄດ້ມາເຊື່ອໃນອົງພຣະຜູ້ເປັນເຈົ້າ;
ຊາວໂກຣິນໂທຫລາຍຄົນທີ່ຟັງຄຳຂອງໂປໂລກໍເຊື່ອ ແລະຮັບບັບຕິສະມາ.
[9]ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບໂປໂລທາງນິມິດໃນຄືນນັ້ນວ່າ, "ຢ່າຢ້ານເລີຍ ແຕ່ຈົ່ງກ່າວຕໍ່ໄປ ຢ່າງມິດງຽບ.[10]ເພາະເຮົາຢູ່ກັບເຈົ້າ,
ບໍ່ມີໃຜຈະພະຍາຍາມທຳຮ້າຍເຈົ້າໄດ້, ເພາະເຮົາມີຄົນຫລວງຫລາຍໃນເມືອງນີ້."[11]ໂປໂລອາໄສຢູ່ທີ່ນັ້ນ,
ແລະສອນພຣະທັມຂອງພຣະເຈົ້າໃຫ້ກັບພວກເຂົາເປັນເວລາໜຶ່ງປີຫົກເດືອນ.
[12]ແຕ່ເມື່ອຄາລີໂອໄດ້ເປັນຜູ້ສຳເລັດລາດສະການແຂວງອະຂາຢາ, ພວກຢິວກໍຮ່ວມຕົວກັນຂຶ້ນຕໍ່ສູ້ໂປໂລ ແລະນຳທ່ານໄປທີ່ສານ;
[13]ພວກເຂົາກ່າວວ່າ, "ຊາຍຄົນນີ້ໄດ້ຊັກຊວນປະຊາຊົນໃຫ້ນັບຖືພຣະເຈົ້າໃນທາງທີ່ຜິດກົດໝາຍ."
[14]ເມື່ອໂປໂລກຳລັງຈະອອກປາກ ຝ່າຍຄາລີໂອນກໍກ່າວແກ່ຊາວຢິວວ່າ, “ໂອ ຊາວຢິວທັງຫລາຍ, ຖ້າເປັນເລື່ອງການຜິດຫລືການຊົ່ວຊ້າປະ-
ການໃດປະການໜຶ່ງ ສົມຄວນເຮົາຈະອົດຟັງພວກທ່ານ.[15]ແຕ່ຖ້າເປັນການໂຕ້ຖຽງກັນເຖິງເລື່ອງຖ້ອຍຄວາມກັບຊື່ຕ່າງ ແລະພຣະບັນ-
ຍັດຂອງພວກທ່ານແລ້ວ ກໍໃຫ້ເປັນທຸລະຂອງພວກທ່ານເອງ ຝ່າຍເຮົາບໍ່ຢາກເປັນຜູ້ຕັດສິນໃນເລື່ອງຢ່າງນັ້ນ.”
[16]ຄາລີໂອຈຶ່ງໄລ່ພວກເຂົາອອກຈາກສານ.[17]ແລ້ວເຂົາພາກັນຈັບໂຊຊະເທນນາຍໂຮງທຳໄປຂ້ຽນຕີຕໍ່ໜ້າສານ ສ່ວນຄາລີ-
ໂອນກໍບໍ່ເຂົ້າຫຍຸ້ງກ່ຽວກັບການນັ້ນຈັກຢ່າງ.
[18]ຫລັງຈາກໂປໂລ, ພັກອາໄສຢູ່ທີ່ນັ້ນອີກຫລາຍວັນ ກໍລາພວກພີ່ນ້ອງລົງເຮືອໄປຍັງແຂວງຊີເຣຍກັບປີຊະກີລາ.
ກ່ອນທີ່ທ່ານຈະອອກຈາກທ່າເຮືອເມືອງເກັນເຂໄອໄປ, ທ່ານໄດ້ແຖຫົວເພາະທ່ານໄດ້ບະບົນຕົວໄວ້.[19]ໂປໂລກໍປະປີຊະກີລາກັບອາກີລາໄວ້ທີ່ນັ້ນ,
ແຕ່ຕົວທ່ານເອງໄດ້ເຂົ້າໄປໃນທຳມາສາລາແລະສົນທະນາໂຕ້ຕອບກັບຢິວ.
[20]ເມື່ອຄົນເຫລົ່ານັ້ນຂໍຮ້ອງໃຫ້ໂປໂລຢູ່ຕໍ່ໄປອີກ, ທ່ານກໍບໍ່ຍອມ.[21]ແຕ່ຂະນະທີ່ຈະຈາກເຂົາໄປ ທ່ານກ່າວວ່າ,
"ຂ້າພະເຈົ້າຈະກັບມາຫາພວກທ່ານອີກ ຖ້າຫາກເປັນພຣະປະສົງຂອງພຣະເຈົ້າ." ແລ້ວທ່ານກໍລົງເຮືອອອກໄປຈາກເມືອງເອເຟໂຊ.
[22]ເມື່ອໂປໂລມາເຖິງເມືອງກາຍຊາເຣຍ, ທ່ານກໍຂຶ້ນໄປທັກທາຍຄຣິສຕະຈັກເຢຣູຊາເລັມ ແລ້ວລົງໄປຍັງເມືອງອັນຕີໂອເຂຍ.
[23]ຫລັງຈາກໃຊ້ເວລາທີ່ນັ້ນໄລຍະໜຶ່ງ, ໂປໂລກໍໄດ້ອອກເດີນທາງໄປທົ່ວເຂດແດນແຂວງຄາລາເຕຍແລະຟີເຄຍ
ແລະກ່າວຄຳໜູນໃຈພວກສາວົກທຸກຄົນ.
[24]ມີຊາວຢິວຄົນໜຶ່ງຊື່ ອາໂປໂລ, ເກີດໃນເມືອງອາເລັກຊັນເດຍໄດ້ມາທີ່ເມືອງເອເຟໂຊ.
ທ່ານເປັນຄົນມີໂວຫານດີແລະຊຳນານຫລາຍໃນເລື່ອງພຣະຄຳພີ.[25]ອາໂປໂລໄດ້ຮັບການສອນຈາກຄຳສອນຂອງອົງພຣະຜູ້ເປັນເຈົ້າ.
ມີຈິດໃຈກະຕືລືລົ້ນທ່ານກ່າວແລະສອນໃນເລື່ອງກ່ຽວກັບພຣະເຢຊູໄດ້ຢ່າງຖືກຕ້ອງ, ແຕ່ທ່ານຮູ້ພຽງແຕ່ບັບຕິສະມາຂອງໂຢຮັນເທົ່ານັ້ນ.
[26]ອາໂປໂລເວົ້າຢ່າງກ້າຫານໃນທຳມາສາລາ. ແຕ່ເມື່ອປີຊະກີລາແລະອາກີລາໄດ້ຟັງທ່ານແລ້ວ, ທ່ານທັງສອງຈຶ່ງຜູກມິດກັບອາໂປໂລ
ແລະອະທິບາຍເລື່ອງລາວໃນທາງຂອງພຣະເຈົ້າໃຫ້ຖືກຍິ່ງຂຶ້ນ.
[27]ເມື່ອທ່ານຕັດສິນໃຈຈະຂ້າມໄປຍັງແຂວງອະຂາຢາ ພວກພີ່ນ້ອງໄດ້ໜູນໃຈທ່ານ ແລະຂຽນຈົດໝາຍຝາກໄປເຖິງພວກສິດທີ່ນັ້ນໄດ້ຕ້ອນ-
ຮັບທ່ານໄວ້ ຄັນທ່ານໄປເຖິງແລ້ວ ທ່ານກໍຊ່ອຍເຫລືອຄົນທັງຫລາຍທີ່ໄດ້ເຊື່ອຍ້ອນພຣະຄຸນຂອງພຣະເຈົ້າຢ່າງຫລວງຫລາຍ.
[28]ເພາະທ່ານໄດ້ໂຕ້ຖຽງກັບພວກຢິວຢ່າງແຂງແຮງຕໍ່ໜ້າຄົນທັງຫລາຍ ໂດຍອ້າງຂໍ້ພຣະຄຳພີທີ່ພິສູດໃຫ້ເຫັນວ່າພຣະເຢຊູຊົງເປັນພຣະຄຣິດ.

 generated on Tue Jun 17 19:01:42 2025

19 [1]ໃນເວລານັ້ນ ຂະນະທີ່ອາໂປໂລຢູ່ທີ່ເມືອງໂກຣິນໂທ: ໂປໂລກໍເດີນທາງຜ່ານເຂດແດນທາງຕອນເໜືອມາຍັງເມືອງເອເຟໂຊ,
ແລະໄດ້ພົບພວກສາວົກບາງຄົນທີ່ນັ້ນ.[2]ໂປໂລຖາມພວກເຂົາວ່າ, "ເມື່ອພວກທ່ານເຊື່ອ ພວກທ່ານໄດ້ຮັບພຣະວິນຍານບໍລິສຸດຫລືບໍ່?
ພວກເຂົາກ່າວກັບທ່ານວ່າ, "ບໍ່, ເຮົາຍັງບໍ່ເຄີຍໄດ້ຍິນເລື່ອງກ່ຽວກັບພຣະວິນຍານບໍລິສຸດເລີຍ."

[3]ໂປໂລຈຶ່ງຖາມເຂົາວ່າ, ຖ້າຢ່າງນັ້ນພວກທ່ານໄດ້ຮັບບັບຕິສະມາແນວໃດ ເຂົາຕອບວ່າ, “ບັບຕິສະມາຂອງໂຢຮັນ.”[4]ໂປໂລຕອບວ່າ,
"ໂຢຮັນໃຫ້ຮັບບັດຕິສະມາດ້ວຍບັບຕິສະມາຂອງການກັບໃຈໃໝ່. ທ່ານບອກກັບຄົນທັງຫລາຍວ່າ ພວກເຂົາຄວນເຊື່ອໃນພຣະອົງ,
ຜູ້ຊຶ່ງສະເດັດມາພາຍຫລັງນັ້ນ, ຄືເຊື່ອໃນພຣະເຢຊູ
[5]ເມື່ອຄົນທັງຫລາຍໄດ້ຍິນດັ່ງນັ້ນ, ພວກເຂົາກໍຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູເຈົ້າ.[6]ແລ້ວໂປໂລກໍວາງມືເທິງພວກເຂົາ,
ພຣະວິນຍານບໍລິສຸດກໍສະເດັດລົງມາສະຖິດກັບພວກເຂົາທຸກຄົນ ພວກເຂົາກໍເວົ້າພາສາອື່ນໆ ແລະ ເຜີຍພຣະທຳ.
[7]ພວກເຂົາມີທັງໝົດປະມານສິບສອງຄົນ.
[8]ຝ່າຍໂປໂລໄດ້ເຂົ້າໄປກ່າວສົນທະນາໃນໂຮງທຳດ້ວຍໃຈກ້າໃນລະຫວ່າງສາມເດືອນ, ໂຈດຖຽງແລະຊັກຊວນໃຫ້ເຊື່ອໃນສິ່ງທີ່ກ່າວເຖິງລາ-
ຊະແຜ່ນດິນຂອງພຣະເຈົ້າ.[9]ແຕ່ລາງຄົນມີໃຈແຂງກະດ້າງບໍ່ຍອມເຊື່ອ ແລະກ່າວຄຳຫຍາບຊ້າເລື່ອງທາງນັ້ນຕໍ່ໜ້າຄົນທັງຫລາຍ ໂປ-
ໂລຈຶ່ງແຍກອອກຈາກເຂົາ ແລະຄັດເອົາພວກລູກສິດໄປນຳ ແລະທ່ານໄດ້ໂຕ້ຖຽງໃນຫ້ອງປະຊຸມຂອງທ່ານຕີຣາໂນທຸກ ວັນ.[10]ການນີ້ມີຢູ່ເປັນເວ-
ລາສອງປີ ຈົນວ່າຄົນທັງຫລາຍທີ່ອາໃສຢູ່ໃນແຂວງອາເຊຍ ທັງພວກຢິວ ແລະພວກກຣີກໄດ້ຍິນພຣະທັມຂອງອົງພຣະຜູ້ເປັນເຈົ້າ.
[11]ພຣະເຈົ້າຊົງເຮັດການອັດສະຈັນດ້ວຍມືຂອງໂປໂລ,[12]ຈົນພວກເຂົາເອົາຜ້າເຊັດໜ້າກັບຜ້າກັນເປື້ອນຈາກຕົວໂປໂລໄປ
ເພື່ອເຮັດໃຫ້ຄົນເຈັບປ່ວຍຫາຍ ແລະໂຣກໄພໄຂ້ເຈັບ ແລະພວກວິນຍານຊົ່ວກໍອອກໄປຈາກພວກເຂົາ.
[13]ແຕ່ພວກຢິວບາງຄົນທີ່ທ່ຽວໄປມາເປັນໝໍໄລ່ຜີ ພະຍາຍາມໃຊ້ພຣະນາມຂອງພຣະເຢຊູເຈົ້າຂັບໄລ່ຜີວ່າ, “ກູບັງຄັບສູໂດຍພຣະເຢຊູຊຶ່ງໂປ-
ໂລປະກາດນັ້ນ.”[14]ອັນໜຶ່ງມີຢິວຜູ້ໜຶ່ງຊື່ຊະເກວາ ເປັນປະໂລຫິດຕົນໃຫຍ່ ມີລູກຊາຍເຈັດຄົນທີ່ເຮັດການຢ່າງນັ້ນ.
[15]ສ່ວນຜີຮ້າຍໄດ້ຕອບເຂົາວ່າ, “ພຣະເຢຊູເຮົາກໍລຶ້ງເຄີຍ ໂປໂລເຮົາກໍຮູ້ຈັກ
ແຕ່ພວກເຈົ້າເປັນຜູ້ໃດ.”[16]ວິນຍານຊົ່ວທີ່ຢູ່ໃນຄົນນັ້ນກໍກະໂດດເຂົ້າໃສ່ພວກໝໍຜີ ແລະເອົາຊະນະພວກເຂົາໄດ້ແລະໂຈມຕີພວກເຂົາ.
ແລ້ວພວກເຂົາກໍໜີອອກຈາກບ້ານນັ້ນໃນສະພາບເປືອຍກາຍ ແລະໄດ້ຮັບບາດເຈັບ.[17]ເລື່ອງນີ້ເປັນທີ່ຮູ້ກັນທົ່ວທັງພວກຢິວ, ແລະ
ພວກກຣີກທີ່ອາໄສຢູ່ໃນເມືອງເອເຟໂຊ. ພວກເຂົາກໍເກີດຄວາມເກງກວາເປັນຢ່າງຫລາຍ, ແລະ
ພຣະນາມຂອງອົງພຣະເຢຊູເຈົ້າກໍໄດ້ຮັບການຍົກຍ້ອງສັນລະເສີນ.
[18]ພວກຜູ້ເຊື່ອຫລາຍຄົນກໍເຂົ້າມາສາລະພາບບາບ ແລະຍອມຮັບວ່າພວກເຂົາເຄີຍເຮັດສິ່ງທີ່ຊົ່ວຮ້າຍ.[19]ມີຫລາຍຄົນທີ່ໃຊ້ເວດມົນຄາ-
ຖາໄດ້ເອົາຕຳລາຂອງຕົນມາເຜົາໄຟເສຍຕໍ່ຫນ້າຄົນທັງປວງ ຕຳລາເຫລົ່ານັ້ນຄິດລາຄາເປັນຫ້າໝື່ນຫລຽນ.[20]ດັ່ງນັ້ນ
ພຣະທັມຂອງພຣະເຈົ້າກໍແຜ່ກະຈາຍກວ້າງອອກໄປດ້ວຍວິທີການທີ່ຊົງອານຸພາບ.
[21]ຫລັງຈາກທີ່ໂປໂລເຊັດສິ້ນງານພັນທະກິດທ່ານທີ່ເມືອງເອເຟໂຊ,
ທ່ານຕັດສິນໃຈໃນພຣະວິນຍານທີ່ຈະເດີນທາງຜ່ານແຂວງມາເກໂດເນຍແລະແຂວງອະຂາຢາໄປຍັງນະຄອນເຢຣູຊາເລັມ; ທ່ານກ່າວວ່າ,
"ຫລັງຈາກທີ່ຂ້າພະເຈົ້າໄປເຖິງທີ່ນັ້ນແລ້ວ ຂ້າພະເຈົ້າຈະຕ້ອງໄປເຫັນກຸງໂຣມດ້ວຍ."[22]ທ່ານຈຶ່ງໃຊ້ຜູ້ຊ່ອຍຂອງຕົນສອງຄົນ ຄືຕີໂມທຽວກັບເອຣາ-
ຊະໂຕ ໄປຍັງແຂວງມາເກໂດເນຍ ຝ່າຍທ່ານເອງກໍຍັງພັກຢູ່ຊົ່ວໄລຍະໜຶ່ງທີ່ແຂວງອາເຊຍ.
[23]ໃນເວລານັ້ນ ໄດ້ເກີດເລື່ອງວຸ້ນວາຍຍິ່ງໃຫຍ່ ໃນເມືອງເອເຟໂຊທີ່ກ່ຽວຂ້ອງກັບທາງນັ້ນ.[24]ດ້ວຍມີຄົນໜຶ່ງຊື່ເດເມທີໂອ ເປັນຊ່າງເງິນ
ໄດ້ເອົາເງິນເຮັດຮູບວິຫານຂອງພະອາເຕມາເປັນເຫດໃຫ້ພວກຊ່າງໄດ້ມີງານຫລວງຫລາຍ.[25]ເຂົາກ່າວວ່າ, "ທ່ານທັງຫລາຍ, ພວກທ່ານຮູ້ຢູ່ວ່າ
ໃຫ້ການເຮັດກິດຈະການນີ້ ເຮັດໃຫ້ເຮົາໄດ້ເງິນຫລວງຫລາຍ."
[26]ແລະທ່ານທັງຫລາຍໄດ້ຮູ້ເຫັນຢູ່ວ່າບໍ່ແມ່ນຈຳເພາະໃນເມືອງເອເຟໂຊເມືອງດຽວ ແຕ່ເກືອບທົ່ວແຂວງອາເຊຍໂປ-
ໂລຜູ້ນີ້ໄດ້ຊັກຊວນຄົນຫລາຍສົມຄວນໃຫ້ຫລົງໄປ ໂດຍກ່າວວ່າ ‘ພະທີ່ສ້າງຂຶ້ນດ້ວຍມືມະນຸດນັ້ນ ບໍ່ແມ່ນພຣະ-
ເຈົ້າແທ້.’[27]ເປັນໜ້າຢ້ານວ່າບໍ່ແມ່ນແຕ່ອາຊີບຂອງພວກເຮົາຈະເສຍຊື່ສຽງຢ່າງດຽວ ແຕ່ພຣະວິຫານກັບສະຖານທີ່ນະມັດສະ-
ການຂອງພະມະຫາອາເຕມາ ຈະຖືກໝິ່ນປະໝາດເໝືອນກັນ, ແລະ ພະນາງນັ້ນຊຶ່ງເປັນທີ່ນັບຖືຂອງບັນດາຊາວອາ-
ເຊຍກັບໝົດທັງໂລກຈະຕົກຕ່ຳຈົນສິ້ນສະຫງ່າລາສີ.”
[28]ເມື່ອພວກເຂົາໄດ້ຍິນຢ່າງນີ້, ພວກເຂົາກໍຄຽດແຄ້ນ ແລະຮ້ອງອອກມາວ່າ,
"ເຈົ້າແມ່ໄດອານາຂອງຊາວເອເຟໂຊເປັນຜູ້ຍິ່ງໃຫຍ່."[29]ແລ້ວໄດ້ເກີດອົນລະຫົນວຸ້ນວາຍຂຶ້ນທົ່ວທັງເມືອງ ເຂົາໄດ້ຈັບເອົາຄາໂຢກັບອາຣິດຕາ-
ໂຂຊາວມາເກໂດເນຍ ຜູ້ເປັນເພື່ອນເດີນທາງຮ່ວມກັບໂປໂລ ດຶງລາກແລ່ນເຂົ້າໄປໃນສະໜາມລະຄອນ.
[30]ໂປໂລຕ້ອງການເຂົ້າໄປໃນຝູງຊົນ, ແຕ່ພວກສາວົກບໍ່ຍອມໃຫ້ທ່ານໃຫ້ເຂົ້າໄປ.[31]ແມ້ແຕ່ພວກເຈົ້າໜ້າທີ່ຂອງແຂວງເອເຊຍທີ່ເປັນໝູ່ຂອງທ່ານ
ກໍໃຊ້ຄົນສົ່ງຂໍ້ຄວາມໄປອ້ອນວອນໂປໂລບໍ່ໃຫ້ເຂົ້າໄປໃນສະໜາມລະຄອນ.[32]ບາງຄົນຮ້ອງວ່າແບບນີ້,
ບາງຄົນຮ້ອງວ່າແບບນັ້ນພວກຝູງຊົນພາສັບສົນ. ຄົນສ່ວນຫລາຍຍັງບໍ່ຮູ້ນຳວ່າເປັນຫຍັງພວກເຂົາຈຶ່ງມາປະຊຸມກັນທີ່ນີ້.
[33]ມີລາງຄົນໃນພວກເຫລົ່ານັ້ນໄດ້ແນະນຳອາເລັກຊັນໂດຊຶ່ງເປັນຄົນທີ່ພວກຢິວໃຫ້ອອກໄປຂ້າງໜ້າ ອາເລັກຊັນໂດ,
ຈຶ່ງກວັກມືໝາຍຈະກ່າວແກ້ແທນຕໍ່ຫນ້າປະຊາຊົນ.[34]ແຕ່ເມື່ອຄົນທັງຫລາຍໄດ້ຮູ້ວ່າເຂົາເປັນຊາວຢິວ, ພວກເຂົາກໍຮ້ອງເປັນສຽງດຽວກັນວ່າ,
"ເຈົ້າແມ່ໄດອານາຂອງຊາວເອເຟໂຊເປັນຜູ້ຍິ່ງໃຫຍ່."
[35]ເມື່ອເລຂາທິການເທດສະບານໄດ້ໃຫ້ປະຊາຊົນງຽບລົງແລ້ວຈຶ່ງກ່າວວ່າ, “ຊາວເອເຟໂຊທັງຫລາຍເອີຍ, ມີຜູ້ໃດນໍທີ່ບໍ່ຮູ້ວ່າ ຊາວເອເຟ-
ໂຊນີ້ເປັນຜູ້ຮັກສາດູແລວິຫານຂອງນາງພຣະມະຫາອາເຕມາ ແລະສິ່ງສັກສິດທີ່ຕົກມາຈາກຟ້າ?[36]ບັດນີ້ດ້ວຍການທັງຫລາຍອັນຖຽງບໍ່ໄດ້ນີ້
ທ່ານທັງຫລາຍຄວນສະຫງົບລົງ ຢ່າເຮັດອັນໃດດ້ວຍຮີບຮ້ອນ.[37]ດ້ວຍວ່າພວກທ່ານໄດ້ນຳເອົາຄົນເຫລົ່ານີ້ມາ ກໍບໍ່ແມ່ນເຂົາເປັນຄົນປຸ້ນວິຫານ
ຫລືໝິ່ນປະໝາດເຈົ້າແມ່ຂອງພວກເຮົາ.
[38]ເພາະສະນັ້ນ, ຖ້າເດເມທີໂອແລະພວກຊ່າງຝີມືຢູ່ກັບເຂົາມີຂໍ້ກ່າວຫາກັບຄົນໃດ, ສານນີ້ກໍເປີດໃຫ້
ແລະມີຜູ້ພິພາກສາໃຫ້ພວກເຂົາໄປຟ້ອງຮ້ອງກັນເອງ.[39]ແຕ່ຖ້າພວກທ່ານຍັງມີເລື່ອງອື່ນໆອີກ, ກໍຄວນຕົກລົງກັນໃນການປະຊຸມສາມັນ.


generated on Tue Jun 17 19:01:42 2025

[40]ເພາະສິ່ງເຮົາທຳເປັນອັນຕະລາຍທີ່ຈະຖືກຟ້ອງຮ້ອງວ່າເປັນຜູ້ກ່ຽວຂ້ອງໃນການເຈລະຈາໃນວັນນີ້. ບໍ່ມີຂໍ້ອ້າງຫຍັງໃນຄວາມວຸ້ນວາຍນີ້,
ແລະເຮົາບໍ່ສາມາດອະທິບາຍໄດ້."[41]ເມື່ອທ່ານກ່າວດັ່ງນັ້ນແລ້ວ, ທ່ານກໍໃຫ້ເລີກການຊຸມນຸມ.


generated on Tue Jun 17 19:01:42 2025

20 [1]ຫລັງຈາກຄວາມວຸ້ນວາຍໄດ້ສະຫງົບລົງແລ້ວ, ໂປໂລຈຶ່ງໃຊ້ຄົນໄປນຳພວກສາວົກມາແລະກ່າວຄຳໜູນໃຈພວກເຂົາ,
ເມື່ອທ່ານກ່າວຄຳອຳລາພວກເຂົາແລ້ວ.[2]ເມື່ອຜ່ານໄປແຂວງມາເກໂດເນຍ ທ່ານເດີນທາງຜ່ານເຂດແດນນັ້ນ,
ກໍໄດ້ກ່າວໜູນໃຈຜູ້ເຊື່ອຢ່າງຫລວງຫລາຍ.[3]ແລ້ວທ່ານກໍໄປຍັງປະເທດກຣີກ ແລະພັກຢູ່ບ່ອນນັ້ນສາມເດືອນ,
ພວກຢິວໄດ້ວາງແຜນທຳຮ້າຍທ່ານໃນຂະນະທີ່ທ່ານຈະລົງເຮືອໄປຍັງແຂວງຊີເຣຍ, ດັ່ງນັ້ນທ່ານຈຶ່ງຕັດສິນໃຈກັບໄປທາງແຂວງມາເກໂດເນຍ.

[4]ພວກທີ່ເດີນທາງໄປແຂວງເອເຊຍກັບທ່ານຄືໂຊປາເຕ ຊາວເມືອງປີໂຣຈາກເບເຣຍ; ອາຣິດຕາໂຂແລະເຊກຸນໂດ
ທັງສອງຄົນເປັນຜູ້ເຊື່ອຊາວເມືອງເດຣະເບ, ແລະຊາວເມືອງຕີຂີໂກ; ແລະຕີໂມທຽວ ແລະໂທຟີໂມຈາກແຂວງເອເຊຍ.
[5]ແຕ່ຄົນເຫລົ່ານີ້ໄດ້ເດີນທາງລ່ວງໜ້າໄປກ່ອນ ແລະກຳລັງຖ້າເຮົາຢູ່ທີ່ເມືອງໂທອາດ.[6]ຫລັງຈາກເທດສະການຂະໜົມປັງບໍ່ມີເຊື້ອ,
ເຮົາລົງເຮືອອອກຈາກເມືອງຟີລິບປອຍ ແລະ ໃນເວລາຫ້າວັນເຮົາກໍມາພົບພວກເຂົາທີ່ເມືອງໂທອາດ. ເຮົາໄດ້ພັກຢູ່ທີ່ນັ້ນເຈັດວັນ.
[7]ໃນວັນຕົ້ນສັບປະດາ, ເມື່ອເຮົາມາປະຊຸມຮ່ວມກັນເພື່ອເຮັດພິທີຫັກເຂົ້າຈີ່, ໂປໂລກໍເວົ້າກັບຜູ້ເຊື່ອເຫລົ່ານັ້ນ.
ທ່ານຕັ້ງໃຈຈະອອກຈາກທີ່ນັ້ນໃນວັນຮຸ່ງຂຶ້ນ, ເພາະສະນັ້ນ ທ່ານຈຶ່ງເວົ້າຕໍ່ໄປຈົນທ່ຽງຄືນ.
[8]ໃນຫ້ອງຊັ້ນເທິງທີ່ເຮົາປະຊຸມກັນນັ້ນມີຕະກຽງຫລາຍດວງ.
[9]ມີຊາຍໜຸ່ມຄົນໜຶ່ງຊື່ຢູຕີໂຂ, ນັ່ງຢູ່ປ່ອງຢ້ຽມໄດ້ເລີ່ມເຫງົານອນຂຶ້ນທຸກເທື່ອ. ໃນຂະນະທີ່ໂປໂລຍັງຄົງເວົ້າຍືດຍາວຕໍ່ໄປອີກ,
ຊາຍໜຸ່ມຄົນນີ້ກໍຍັງຄົງລັບຢູ່, ແລະ ພັດຕົກລົງໄປຈາກຊັ້ນສາມ ແລະເມື່ອຍົກຂຶ້ນມາກໍພົບວ່າຕາຍແລ້ວ.
[10]ແຕ່ເມື່ອໂປໂລລົງໄປທ່ານກໍກອດເຂົາໄວ້. ແລ້ວທ່ານກ່າວວ່າ, "ຢ່າໂສກເສົ້າໄປເລີຍ, ເພາະເຂົາຍັງມີຊີວິດຢູ່."
[11]ຄັນໂປໂລຂຶ້ນເມື່ອ ແລະຫັກເຂົ້າຈີ່ຮັບປະທານແລ້ວ ກໍສົນທະນາກັບເຂົາຕໍ່ໄປອີກດົນນານສົມຄວນຈົນເຖິງຮຸ່ງເຊົ້າ ແລ້ວທ່ານໄດ້ຈາກເຂົາໄປ.
[12]ແລ້ວເຂົາໄດ້ນຳເອົາຊາຍໜຸ່ມຜູ້ຍັງມີຊີວິດຢູ່ກັບໄປ ແລະ ໂດຍມີຄວາມຊົມຊື່ນຍິນດີຫລາຍ.
[13]ຝ່າຍພວກເຮົາໄດ້ລົງເຮືອກ່ອນຈຶ່ງເດີນທາງນ້ຳໄປເຖິງເມືອງອາໂຊ ໝາຍໃຈວ່າຈະຮັບໂປໂລຂຶ້ນເຮືອທີ່ນັ້ນ, ດ້ວຍວ່າທ່ານເອງໄດ້ຈັດໄວ້ດັ່ງນັ້ນ,
ເພາະທ່ານໝາຍໃຈວ່າຈະໄປທາງບົກ.[14]ຄັນທ່ານພົບພວກເຮົາທີ່ເມືອງອາໂຊແລ້ວ, ພວກເຮົາກໍຮັບທ່ານຂຶ້ນເຮືອມາຍັງເມືອງມີເຕເລເນ.
[15]ຫລັງຈາກທີ່ເຮົາອອກຈາກເຮືອທີ່ນັ້ນ ແລະວັນຕໍ່ມາກໍເຖິງຝັ່ງຕົງຂ້າມເກາະຂີໂອ. ອີກວັນຕໍ່ມາ
ເຮົາກໍມາເຖິງເມືອງມີເລໂຕເພາະໂປໂລຕັດສິນໃຈທີ່ຈະຜ່ານເມືອງເອເຟໂຊໄປ ເພື່ອທີ່ຈະບໍ່ເສຍເວລາໃນແຂວງເອເຊຍ.[16]ດ້ວຍໂປໂລໄດ້ຕັ້ງ-
ໃຈວ່າຈະກາຍເມືອງເອເຟໂຊໄປເພື່ອບໍ່ໃຫ້ຄ້າງຢູ່ເທິງໃນແຂວງອາເຊຍ; ເພາະທ່ານຟ້າວຢາກໃຫ້ເຖິງກຸງເຢຣູຊາເລັມຖ້າເປັນໄປໄດ້,
ກໍໃຫ້ທັນວັນເທດສະການເພັນເຕຄໍສະເຕ.
[17]ໂປໂລຈຶ່ງສົ່ງຄົນເຫລົ່ານັ້ນຈາກເມືອງມີເລໂຕໄປຍັງເອເຟໂຊ ເພື່ອຮ້ອງບັນດາຜູ້ປົກຄອງຄຣິສຕະຈັກເຫລົ່ານັ້ນມາພົບທ່ານ.
[18]ເມື່ອພວກເຂົາມາພົບທ່ານແລ້ວ, ທ່ານຈຶ່ງກ່າວກັບພວກເຂົາວ່າ, "ພວກທ່ານເອງກໍຮູ້ດີວ່າ,
ນັບຕັ້ງແຕ່ວັນແລກທີ່ຂ້ານ້ອຍໄດ້ຍ່າງເຂົ້າມາໃນແຂວງເອເຊຍ, ຂ້າພະເຈົ້າໄດ້ໃຊ້ເວລາຢູ່ກັບພວກທ່ານຢ່າງໃດ.
[19]ຂ້ານ້ອຍໄດ້ຮັກສາການຮັບໃຊ້ພຣະເຈົ້າດ້ວຍຄວາມຕ່ຳຕ້ອຍທີ່ສຸດ ແລະ ດ້ວຍນ້ຳຕາ, ແລະ
ດ້ວຍຄວາມທຸກທໍລະມານທີ່ເກີດຂຶ້ນນຳຂ້ານ້ອຍເພາະຊາວຢິວ.[20]ທ່ານຮູ້ດີວ່າເຮົາບໍ່ໄດ້ທໍ້ຖອຍຈາກການປະກາດແລະສັ່ງສອນພວກທ່ານ ໃນທີ່ປະ-
ຊຸມແລະຕາມບ້ານຕາມເຮືອນ.[21]ທັງເຕືອນສະຕິຢ່າງໜັກແໜ້ນໃຫ້ພວກຢິວແລະ ພວກກຣີກ ເຖິງເລື່ອງການຖິ້ມໃຈເກົ່າເອົາໃຈໃໝ່ຈຳ-
ເພາະພຣະເຈົ້າ ແລະ ຄວາມເຊື່ອຈຳເພາະພຣະເຢຊູຄຣິດເຈົ້າຂອງພວກເຮົາ.
[22]ມາບັດນີ້, ພຣະວິນຍານບໍລິສຸດໄດ້ຊົງນຳຂ້າພະເຈົ້າ, ທີ່ຈະໄປຍັງນະຄອນເຢຣູຊາເລັມ ຊຶ່ງບໍ່ຮູ້ວ່າຈະມີຫຍັງເກີດຂຶ້ນກັບຂ້າພະເຈົ້າທີ່ນັ້ນ.
[23]ເວັ້ນໄວ້ແຕ່ພຣະວິນຍານບໍລິສຸດຊົງເຕືອນສະຕິເຮົາໃນທຸກບ້ານທຸກເມືອງວ່າ ເຄື່ອງຜູກມັດແລະຄວາມທຸກລຳບາກຄອຍຖ້າເຮົາຢູ່.
[24]ແຕ່ເຮົາບໍ່ໄດ້ຖືວ່າຊີວິດຂອງເຮົາເປັນຂອງມີຄ່າແກ່ເຮົາຢ່າງໃດເພື່ອເຮົາຈະເຮັດໜ້າທີ່ຂອງເຮົາ, ແລະ ຈະໄດ້ປະຕິ-
ບັດງານທີ່ໄດ້ຮັບມອບໝາຍຈາກອົງພຣະຜູ້ເປັນເຈົ້າໃຫ້ສຳເລັດ ຄືທີ່ຈະເປັນພະຍານຢ່າງຄົບຖ້ວນເຖິງເລື່ອງຂ່າວປະເສີດກ່ຽວກັບພຣະ-
ຄຸນຂອງພຣະເຈົ້ານັ້ນ.
[25]ຂ້າພະເຈົ້າຮູ້ວ່າ, ພວກທ່ານທຸກຄົນທີ່ຂ້າພະເຈົ້າໄດ້ປະກາດລາດຊະອານາຈັກຂອງພຣະເຈົ້າ, ຈະບໍ່ໄດ້ເຫັນຂ້າພະເຈົ້າອີກ.
[26]ເພາະສະນັ້ນຂ້າພະເຈົ້າຈຶ່ງຢືນຢັນກັບພວກທ່ານໃນວັນນີ້ວ່າ, ຂ້າພະເຈົ້າບໍ່ມີຄວາມຜິດໃນຄວາມຕາຍຂອງຜູ້ໃດ.[27]ດ້ວຍວ່າເຮົາບໍ່ໄດ້ທໍ້-
ຖອຍຈາກການປະກາດພຣະປະສົງຂອງພຣະເຈົ້າ ໃຫ້ພວກທ່ານຮູ້.
[28]ເພາະສະນັ້ນຈົ່ງລະວັງທັງຕົວທ່ານເອງ, ແລະຝູງແກະທີ່ພຣະວິນຍານບໍລິສຸດຊົງຕັ້ງທ່ານໄວ້ໃຫ້ເປັນຜູ້ດູແລໃຫ້ດີ.
ຈົ່ງລະວັງທີ່ຈະດູແລຄຣິດຕະຈັກຂອງພຣະເຈົ້າ, ທີ່ພຣະອົງຊົງຊື້ມາດ້ວຍພຣະໂລຫິດຂອງພຣະອົງ.[29]ຂ້າພະເຈົ້າຮູ້ວ່າ
ຫລັງຈາກທີ່ຂ້າພະເຈົ້າຈາກໄປແລ້ວ, ຈະມີຝູງໝາປ່າທີ່ດຸຮ້າຍເຂົ້າມາໃນພວກທ່ານ ແລະບໍ່ລະເວັ້ນຝູງແກະເລີຍ.[30]ຂ້າພະເຈົ້າຮູ້ວ່າ
ແມ້ແຕ່ໃນພວກທ່ານເອງ ກໍຈະມີບາງຄົນທີ່ກ່າວສິ່ງທີ່ເຮັດໃຫ້ເຂົາໄປ ເພື່ອຊັກຊວນພວກສາວົກໃຫ້ຫລົງຕາມພວກເຂົາໄປ.
[31]ເພາະສະນັ້ນຈົ່ງເຝົ້າລະວັງໃຫ້ດີ. ຈຳໄວ້ວ່າຂ້າພະເຈົ້າໄດ້ສັ່ງສອນທຸກຄົນດ້ວຍນ້ຳຕາທັງກາງວັນແລະກາງຄືນຕະຫລອດສາມປີບໍ່ມີຢຸດຢ່ອນ.
[32]ບັດນີ້ ຂ້າພະເຈົ້າຂໍມອບພວກທ່ານໄວ້ກັບພຣະເຈົ້າແລະພຣະທັມແຫ່ງພຣະຄຸນຂອງພຣະອົງ, ທີ່ສາມາດກໍ່ສ້າງທ່ານຂຶ້ນໄດ້
ແລະໃຫ້ທ່ານເປັນຜູ້ຮັບມໍລະດົກທ່າມກາງຄົນເຫລົ່ານັ້ນ ທີ່ຖວາຍຕົນແດ່ພຣະເຈົ້າ.
[33]ຂ້າພະເຈົ້າບໍ່ໄດ້ໂລບເອົາເງິນ, ທອງ, ຫລື ເສື້ອຜ້າຂອງໃຜເລີຍ.[34]ພວກທ່ານເອງກໍຮູ້ວ່າ ມືທັງສອງຂອງຂ້າພະເຈົ້າ
ໄດ້ຈັດຫາສິ່ງຈຳເປັນສຳລັບຕົນເອງ ແລະ ສຳຫລັບພວກຄົນທີ່ຢູ່ກັບຂ້າພະເຈົ້າ.[35]ຂ້າພະເຈົ້າໄດ້ວາງແບບຢ່າງໃຫ້ທ່ານໃນທຸກເລື່ອງແລ້ວ,
ໃນການທີ່ຈະຊ່ວຍຄົນທີ່ອ່ອນແອດ້ວຍການເຮັດວຽກ, ແລະທ່ານຄວນຈະລະລຶກເຖິງພຣະທັມຂອງພຣະອົງພຣະເຢຊູເຈົ້າ,
ຕາມທີ່ພຣະອົງກ່າວວ່າ, "ການໃຫ້ເປັນເຫດໃຫ້ມີຄວາມສຸກ ກວ່າການຮັບ."
[36]ຫລັງຈາກທີ່ເພິ່ນໄດ້ກ່າວເຊັ່ນນີ້ແລ້ວ, ເພິ່ນກໍຄຸເຂົ່າລົງອະທິຖານຮ່ວມກັບພວກເຂົາທຸກຄົນ.[37]ພວກເຂົາຮ້ອງໄຫ້ຢ່າງໜັກ
ແລະກອດຄໍໂປໂລແລະຈູບເພິ່ນ.[38]ພວກເຂົາໂສກເສົ້າຢ່າງທີ່ສຸດ ເພາະຖ້ອຍຄຳທີ່ເພິ່ນໄດ້ກ່າວ, ພວກເຂົາຈະບໍ່ໄດ້ເຫັນໜ້າທ່ານອີກ.
ແລ້ວພວກເຂົາກໍພາທ່ານໄປສົ່ງທີ່ເຮືອ.

21 [1]ເມື່ອພວກເຮົາລາຈາກພວກເຂົາແລ້ວກໍລົງເຮືອໄປ, ພວກເຮົາໄດ້ເດີນທາງໄປຍັງເມືອງໂກດ, ແລະ ຕື່ນເຊົ້າກໍມາເຖິງເມືອງໂຣໂດ ແລະ
ຈາກທີ່ນັ້ນເຮົາກໍໄປຍັງເມືອງປາຕາຣາ.[2]ເມື່ອເຮົາພົບເຮືອລຳໜຶ່ງກຳລັງຈະໄປເມືອງຟີນີເຊຍເຮົາຈຶ່ງລົງເຮືອລຳນັ້ນແລ່ນອອກໄປ.

[3]ພາຍຫລັງຫລຽວເຫັນໄຊປຣັດແລ້ວ, ເຮົາກໍຜ່ານເກາະນັ້ນໄປທາງຊ້າຍ, ພວກເຮົາໄດ້ລ່ອງເຮືອໄປຍັງແຂວງຊີເຣຍ ແລະ
ໄດ້ຈອດເຮືອທີ່ທ່າເມືອງຕີເຣ, ເພາະເຮືອຕ້ອງເອົາຂອງທີ່ບັນທຸກມາຂຶ້ນທ່າທີ່ນັ້ນ.[4]ຫລັງຈາກທີ່ເຮົາຫາພວກສາວົກທີ່ນັ້ນພົບແລ້ວ
ເຮົາກໍພັກຢູ່ທີ່ນັ້ນເຈັດວັນ. ພວກສາວົກເຫລົ່ານີ້ໄດ້ກ່າວກັບເປໂຕໂດຍພຣະວິນຍານບໍ່ໃຫ້ຂຶ້ນໄປຍັງກຸງເຢຣູຊາເລັມ.
[5]ຫລັງຈາກທີ່ເຮົາຢູ່ທີ່ນັ້ນຫລາຍວັນ, ແລ້ວພວກເຮົາກໍອອກເດີນທາງໄປ, ແລະ ບັນດາພວກສາວົກ ພ້ອມກັບພັນລະຍາ
ແລະລູກກໍຕາມມາສົ່ງເຮົາຈົນເຮົາອອກໄປຈາກເມືອງນັ້ນ. ແລ້ວພວກເຮົາກໍຄຸເຂົ່າລົງອະທິຖານທີ່ຊາຍຫາດ,[6]ແລະກ່າວອຳລາຊຶ່ງກັນ ແລະ ກັນ,
ພວກເຮົາກໍລົງເຮືອເດີນທາງຕໍ່, ແລະ ພວກເຂົາກໍເດີນທາງກັບບ້ານ.
[7]ເມື່ອແລ່ນເຮືອຈາກເມືອງຕີເຣແລ້ວ, ພວກເຮົາໄດ້ມາເຖິງເມືອງປະໂຕເລມາຍ. ເຮົາຈຶ່ງໄປຄຳນັບທັກທາຍພີ່ນ້ອງທີ່ນັ້ນ ແລະ
ພັກຢູ່ກັບພວກເຂົາວັນໜຶ່ງ.[8]ໃນເຊົ້າວັນໃໝ່ພວກເຮົາກໍຈາກໄປ ແລະ ໄປຍັງເມືອງກາຍຊາເຣຍ.
ພວກເຮົາເຂົ້າໄປໃນເຮືອນຂອງຟີລິບຜູ້ປະກາດຂ່າວປະເສີດຊຶ່ງເປັນໜຶ່ງໃນເຈັດຄົນນັ້ນ ແລະ ພວກເຮົາກໍພັກຢູ່ກັບເຂົາ.
[9]ຕອນນີ້ຟີລິບມີລູກສາວສີ່ຄົນທີ່ຍັງເປັນຍິງພົມມະຈາລີ ເປັນຜູ້ປະກາດພຣະວັດຈະນະທັມ.
[10]ເມື່ອເຮົາພັກຢູ່ທີ່ນັ້ນຫລາຍວັນແລ້ວ ມີຜູ້ທຳນວຍຜູ້ໜຶ່ງຊື່ວ່າອາຄະໂບລົງມາຈາກແຂວງຢູດາຍ.
[11]ເຂົາໄດ້ມາຫາພວກເຮົາແລ້ວເອົາເຂັມຂັດຂອງໂປໂລໄປມັດມືແລະຕີນຂອງເຂົາດ້ວຍເຂັມຂັດນັ້ນແລ້ວກ່າວວ່າ,
"ພຣະວິນຍານບໍຣິສຸດເຈົ້າກ່າວວ່າ, 'ພວກຢິວໃນກຸງເຢຣູຊາເລັມຈະຜູກມັດຄົນທີ່ເປັນເຈົ້າຂອງເຂັມຂັດນີ້,
ແລ້ວພວກເຂົາຈະສົ່ງມອບທ່ານໄວ້ໃນມືຂອງພວກຕ່າງຊາດ."
[12]ເມື່ອພວກເຮົາໄດ້ຍິນເລື່ອງນີ້ເຮົາ, ຮ່ວມກັບພວກຄົນທີ່ຢູ່ທີ່ນັ້ນກໍອ້ອນວອນໂປໂລບໍ່ໃຫ້ຂຶ້ນໄປຍັງກຸງເຢຣູຊາເລັມ.[13]ໂປໂລຈຶ່ງຕອບວ່າ,
"ພວກທ່ານກຳລັງເຮັດຫຍັງ? ດ້ວຍການຮ້ອງໄຫ້ ແລະ ເຮັດໃຫ້ຂ້າພະເຈົ້າຊໍ້າໃຈ? ເມື່ອຂ້າພະເຈົ້າພ້ອມແລ້ວ, ບໍ່ພຽງແຕ່ຈະຖືກມັດ,
ແຕ່ເຖິງແມ່ນຈະຕາຍຢູ່ທີ່ກຸງເຢຣູຊາເລັມ ໂດຍເພາະພຣະນາມຂອງພຣະເຢຊູເຈົ້າ.[14]ເມື່ອໂປໂລບໍ່ຍອມຟັງຄຳຂໍຮ້ອງພວກເຂົາຈຶ່ງຢຸດ
ບໍ່ພະຍາຍາມທີ່ຈະເວົ້າອີກ ແລ້ວກ່າວວ່າ, "ຂໍໃຫ້ເປັນໄປຕາມນ້ຳພຣະໄທຂອງອົງພຣະຜູ້ເປັນເຈົ້າເຖີດ."
[15]ຫລັງຈາກມື້ນັ້ນ, ພວກເຮົາກໍເກັບເອົາສິ່ງຂອງແລ້ວຂຶ້ນໄປຍັງກຸງເຢຣູຊາເລັມ.[16]ມີສາວົກບາງຄົນຈາກເມືອງກາຍຊາເຣຍໄປກັບເຮົາດ້ວຍ.
ພວກເຂົາພາເຮົາໄປຫາຊາຍຄົນໜຶ່ງຊື່ມານາໂຊນ, ຊາວເກາະໄຊປຣັດ, ທີ່ເປັນສາວົກໃນຊ່ວງທຳອິດ, ໂດຍໃຫ້ເຮົາອາໄສຢູ່ກັບເຂົາ.
[17]ເມື່ອພວກເຮົາມາເຖິງກຸງເຢຣູຊາເລັມແລ້ວ ພວກອ້າຍນ້ອງກໍໄດ້ມາຕ້ອນຮັບເຮົາດ້ວຍຄວາມຍິນດີ.
[18]ຕື່ນເຊົ້າມາໂປໂລກັບພວກເຮົາກໍໄປຫາຢາໂກໂບ, ແລະພວກຜູ້ອາວຸດໂສທຸກຄົນຢູ່ທີ່ນັ້ນ.[19]ເມື່ອເພິ່ນໄດ້ທັກທາຍພວກເຂົາແລ້ວ,
ເພິ່ນກໍໄດ້ລາຍງານແຕ່ລະຄົນ ໃນສິ່ງທີ່ພຣະເຈົ້າໄດ້ຊົງກະທຳໃນທ່າມກາງຄົນຕ່າງຊາດ ຜ່ານວຽກງານຮັບໃຊ້ຂອງພຣະອົງ.
[20]ເມື່ອພວກເຂົາໄດ້ຍິນເລື່ອງນີ້, ພວກເຂົາກໍໄດ້ສັນລະເສີນພຣະເຈົ້າ ແລະ ພວກເຂົາກ່າວກັບໂປໂລວ່າ, "ອ້າຍເອີຍ,
ທ່ານເຫັນແລ້ວວ່າມີພວກຢິວຫລາຍພັນຄົນທີ່ເຊື່ອໃນທ່າມກາງຊາວຢິວ. ພວກເຂົາທຸກຄົນມີຄວາມໝັ້ນໝັ້ນໃນການຖືຮັກສາກົດບັນຍັດ.
[21]ພວກເຂົາໄດ້ຮັບຄຳບອກກຽວກັບທ່ານ, ວ່າທ່ານສັ່ງສອນໃຫ້ພວກຢິວທັງໝົດທີ່ອາໄສຢູ່ໃນໝູ່ຄົນຕ່າງຊາດໃຫ້ປະຖິ້ມກົດບັນຍັດຂອງໂມເຊ,
ແລະ ບອກພວກເຂົາບໍ່ຕ້ອງໃຫ້ລູກຂອງຕົນເຂົ້າພິທີຕັດ, ແລະ ບໍ່ຕ້ອງທຳຕາມທຳນຽມດັ້ງເດີມ.
[22]ພວກເຮົາຄວນຈະເຮັດຢ່າງໃດໃນເລື່ອງນີ້? ພວກເຂົາຄົງຈະຮູ້ຂ່າວວ່າທ່ານມາ.
[23]ເພາະສະນັ້ນເຮົາຈະບອກທ່ານວ່າຕອນນີ້ເຮົາມີສີ່ຄົນທີ່ໃຫ້ຄຳປະຕິຍານຕົວໄວ້.[24]ທ່ານຈົ່ງພາຄົນເຫລົ່ານັ້ນໄປ ແລະ
ເຮັດພິທີຊຳລະຕົວທ່ານຮ່ວມກັບພວກເຂົາ, ແລະ ຈ່າຍຄ່າທຳນຽມໃຫ້ແກ່ພວກເຂົາດ້ວຍ, ເພື່ອໃຫ້ພວກເຂົາສາມາດແຖຫົວໄດ້.
ເພື່ອທີ່ທຸກຄົນຈະໄດ້ຮູ້ວ່າເລື່ອງລາວຕ່າງໆທີ່ໄດ້ຍິນກ່ຽວກັບທ່ານເປັນຄວາມບໍ່ຈິງ ແລະ ໄດ້ຮູ້ວ່າພວກທ່ານກໍປະຕິບັດຕາມກົດບັນຍັດເຊັ່ນກັນ.
[25]ສ່ວນພວກຕ່າງຊາດທີ່ເຊື່ອນັ້ນເຮົາກໍໄດ້ຂຽນຈົດໝາຍຄຳສັ່ງໃຫ້ພວກເຂົາງົດເວັ້ນຈາກການກິນອາຫານທີ່ບູຊາຮູບເຄົາຣົບ,
ງົດຈາກການກິນເລືອດ, ງົດຈາກການກິນເນື້ອສັດທີ່ຖືກຮັດຄໍຕາຍ ແລະ
ຫລີກເວັ້ນຈາກການຜິດສິນລະທຳທາງເພດ."[26]ແລ້ວໂປໂລຈຶ່ງພາຄົນເຫລົ່ານັ້ນໄປ ແລະ
ວັນຕໍ່ມາກໍເຮັດພິທີຊຳລະຕົນເອງດ້ວຍກັນກັບພວກເຂົາແລ້ວຈຶ່ງເຂົ້າໄປໃນພຣະວິຫານ,
ປະກາດກຳນົດວັນພິທີການຊຳລະຕົວຈົນກວ່າພວກເຂົາຈະຖວາຍເຄື່ອງບູຊາໃຫ້ແກ່ໝົດທຸກຄົນ.
[27]ເມື່ອໃກ້ຄົບເຈັດວັນແລ້ວ, ພວກຢິວທີ່ມາຈາກແຄວັນເອເຊຍ, ໄດ້ຫລຽວເຫັນໂປໂລໃນພຣະວິຫານ, ແລະ ພວກເຂົາຍຸຍົງປະຊາຊົນໃຫ້ຕໍ່ຕ້ານ
ແລະຈັບໂປໂລ.[28]ພວກເຂົາຮ້ອງຂຶ້ນວ່າ, "ຊົນຊາດອິດສະຣະເອນເອີຍ, ຈົ່ງຊ່ວຍພວກເຮົາເຖີດ.
ຊາຍຄົນນີ້ໄດ້ສອນທຸກຄົນໃນທຸກແຫ່ງໃຫ້ເປັນສັດຕູຕໍ່ຊົນຊາດເຮົາຕໍ່ກົດບັນຍັດຂອງໂມເຊ ແລະ ໃນພຣະວິຫານນີ້. ນອກຈາກນີ້,
ເຂົາຍັງພາຄົນກຣີກເຂົ້າມາໃນພຣະວິຫານຊຶ່ງເຮັດໃຫ້ສະຖານທີ່ບໍຣິສຸດແຫ່ງນີ້ເປັນມົນທິນ."[29]ເພາະກ່ອນໜ້ານີ້ຄົນພວກນັ້ນໄດ້ເຫັນໂທຟີໂມຢູ່ກັບໂປໂລໃນເມືອງນັ້ນ
ແລະ ພວກເຂົາຈຶ່ງຄິດວ່າໂປໂລພາຄົນນັ້ນເຂົ້າມາໃນໃນພຣະວິຫານ.
[30]ຄົນທັງເມືອງກໍເກີດອົນລະວົນ, ແລະ ປະຊາຊົນກໍແລ່ນເຂົ້າໄປ ແລະ ຈັບໂປໂລ.
ພວກເຂົາດຶງລາກເພິ່ນອອກຈາກພຣະວິຫານແລ້ວກໍປິດປະຕູທັນທີ.[31]ຂະນະທີ່ພວກເຂົາກຳລັງຈະຂ້າເພິ່ນ, ຂ່າວກໍໄດ້ມາເຖິງນາຍພົນທະຫານ
ວ່າທັງເມືອງເຢຣູຊາເລັມແມ່ນເກີດຄວາມສັບສົນວຸ້ນວາຍ.
[32]ທ່ານຈຶ່ງນຳພວກທະຫານ ແລະ ບັນດານາຍຮ້ອຍແລ່ນໄປຫາປະຊາຊົນທັນທີ.
ເມື່ອປະຊາຊົນເຫັນນາຍພັນມາພ້ອມພວກທະຫານພວກເຂົາກໍຢຸດຕີໂປໂລ.[33]ຫລັງຈາກນັ້ນ ນາຍພົນກໍໄດ້ໄປເຖິງ ແລະ
ສັ່ງໃຫ້ຈັບໂຕເພິ່ນດ້ວຍລ່າມໂສ້ສອງເສັ້ນ. ແລ້ວເຂົາກໍຖາມວ່າຜູ້ນີ້ແມ່ນໃຜ ແລະ ລາວໄດ້ເຮັດຫຍັງ.
[34]ບາງຄົນໃນປະຊາຊົນນັ້ນຕ່າງກໍຮ້ອງຂຶ້ນວ່າຢ່າງນີ້ ແລະ ບາງຄົນວ່າຢ່າງນັ້ນ.
ເມື່ອນາຍພົນບໍ່ສາມາດຮູ້ເລື່ອງອັນໃດໄດ້ເພາະສຽງເຫລົ່ານັ້ນທ່ານຈຶ່ງສັ່ງໃຫ້ພາໂປໂລເຂົ້າໄປໃນທີ່ໝັ້ນ.[35]ເມື່ອທ່ານໄດ້ມາເຖິງຂັ້ນໃດແລ້ວ,
ພວກທະຫານກໍແບກທ່ານໄປເນື່ອງຈາກຄວາມຮຸນແຮງຂອງປະຊາຊົນ.[36]ເພາະປະຊາຊົນໄດ້ຕິດຕາມໄປແລະ ຮ້ອງຂຶ້ນວ່າ, "ຂ້າມັນເສຍ!"

 generated on Tue Jun 17 19:01:42 2025

[37]ເມື່ອໂປໂລຖືກນຳຕົວມາຍັງທີ່ກົມທະຫານ, ແລ້ວທ່ານຈຶ່ງກ່າວກັບນາຍພົນວ່າ, "ຂໍໃຫ້ຂ້າພະເຈົ້າເວົ້າບາງສິ່ງກັບທ່ານໄດ້ບໍ?"
ນາຍພົນຈຶ່ງຖາມວ່າ, "ເຈົ້າເວົ້າພາສາກຣີກໄດ້ບໍ?[38]ເຈົ້າບໍ່ແມ່ນຄົນເອຢິບ, ຜູ້ທີ່ກໍ່ການກະບົດຄາວກ່ອນ ແລະ
ໄດ້ນຳພາພວກຜູ້ກໍ່ການຮ້າຍສີ່ພັນຄົນເຂົ້າໄປໃນຖິ່ນທຸລະກັນດານບໍ?"
[39]ໂປໂລຕອບວ່າ "ຂ້າພະເຈົ້າເປັນຊາວຢິວ, ທີ່ມາຈາກເມືອງຕາໂຊໃນແຂວງກີລີເກຍ. ຂ້າພະເຈົ້າເປັນພົນລະເມືອງຂອງເມືອງໜຶ່ງທີ່ສຳຄັນນີ້.
ຂ້າພະເຈົ້າຂໍອະນຸຍາດທ່ານເວົ້າກັບປະຊາຊົນແດ່ທ້ອນ."[40]ໂປໂລຈຶ່ງຢືນຂຶ້ນເທິງຂັ້ນໃດ ແລະ ໂບກມືໃຫ້ກັບປະຊາຊົນ. ເມື່ອນັ້ນກໍ່ງຽບສະຫງົບລົງ,
ແລ້ວເພິ່ນຈຶ່ງກ່າວກັບພວກເຂົາເປັນພາສາເຮັບເຣີວ່າ,


generated on Tue Jun 17 19:01:42 2025

22 [1]"ອ້າຍນ້ອງ ແລະ ບັນພະບຸຣຸດທັງຫລາຍ, ຂໍຟັງຄຳໃຫ້ການຂອງຂ້າພະເຈົ້າ
ທີ່ຂ້າພະເຈົ້າຈະກ່າວແກ່ທ່ານທັງຫລາຍ."[2]ເມື່ອປະຊາຊົນໄດ້ຍິນໂປໂລເວົ້າກັບພວກເຂົາເປັນພາສາເຮັບເຣີ,
ພວກເຂົາກໍເລີ່ມງຽບສຽງລົງກວ່າເກົ່າ. ເພິ່ນກ່າວວ່າ,

[3]"ຂ້າພະເຈົ້າເປັນຊາວຢິວ, ເກີດທີ່ເມືອງຕາໂຊໃນແຂວງກີລີເກຍ, ແຕ່ໄດ້ຮັບການສຶກສາໃນເມືອງນີ້ເຄີຍເປັນລູກສິດຂອງຄາມາລີເອນ.
ຂ້າພະເຈົ້າໄດ້ຮັບການສັ່ງສອນຢ່າງເຄັ່ງຄັດຕາມກົດບັນຍັດຂອງບັນພະບຸລຸດຂອງເຮົາຂ້າພະເຈົ້າຫວງແຫນພຣະເຈົ້າເຊັ່ນດຽວກັບພວກທ່ານໃນວັນນີ້.
[4]ຂ້າພະເຈົ້າໄດ້ຂົ່ມເຫັງພວກທີ່ຖືທາງນີ້ຈົນເຖິງຕາຍ, ຂ້າພະເຈົ້າໄດ້ຜູກມັດທັງຊາຍ ແລະ ຍິງ ແລະ ສົ່ງພວກເຂົາໄວ້ໃນຄຸກ,[5]ມະຫາປະໂລຫິດ
ແລະ ພວກຜູ້ອາວຸດໂສທຸກຄົນສາມາດເປັນພະຍານໄດ້ ວ່າຂ້າພະເຈົ້າໄດ້ຮັບຈົດໝາຍຈາກພວກເຂົາສຳລັບພີ່ນ້ອງໃນເມືອງດາມັສກັດ, ແລະ
ໃຫ້ຂ້າພະເຈົ້າເດີນທາງໄປທີ່ນັ້ນຂ້າພະເຈົ້ານຳຜູ້ທີ່ຖືໃນທາງນີ້ກັບມາຍັງກຸງເຢຣູຊາເລັມເພື່ອຮັບການລົງໂທດ.
[6]ມີເຫດການເກີດຂຶ້ນຂະນະທີ່ຂ້າພະເຈົ້ກຳລັງເດີນທາງ ແລະ ເມື່ອໃກ້ເຖິງເມືອງດາມັສກັດ,
ປະມານທ່ຽງວັນທັນໃດນັ້ນມີແສງກ້າຈາກສະຫວັນສ່ອງແສງຢູ່ລອບຕົວຂ້າພະເຈົ້າ.[7]ຂ້າພະເຈົ້າລົ້ມລົງກັບພື້ນ ແລະ
ໄດ້ຍິນສຽງໜຶ່ງເວົ້າກັບຂ້າພະເຈົ້າວ່າ, ' ໂຊໂລ, ໂຊໂລເອີຍ, ເຈົ້າຂົ່ມເຫັງເຮົາເຮັດຫຍັງ?'[8]ຂ້າພະເຈົ້າຕອບວ່າ, 'ພຣະອົງເຈົ້າເປັນຜູ້ໃດ?'
ພຣະອົງຊົງກ່າວແກ່ຂ້າພະເຈົ້າວ່າ, 'ເຮົາຄືເຢຊູຊາວນາຊາເຣັດ, ຜູ້ທີ່ເຈົ້າກຳລັງຂົ່ມເຫັງ.'
[9]ບັນດາຜູ້ທີ່ຢູ່ກັບຂ້າພະເຈົ້າໄດ້ເຫັນແສງສະຫວ່າງນັ້ນ, ແຕ່ພວກເຂົາບໍ່ເຂົ້າໃຈສຽງຂອງພຣະອົງຜູ້ທີ່ກ່າວກັບຂ້າພະເຈົ້າ,[10]ຂ້າພະເຈົ້າກ່າວວ່າ,
'ພຣະຜູ້ເປັນເຈົ້າ, ຂ້າພະອົງຄວນຈະເຮັດຢ່າງໃດ? ອົງພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ 'ຈົ່ງລຸກຂຶ້ນ ແລະ ເຂົ້າໄປໃນເມືອງດາມັສກັດ;
ທີ່ນັ້ນຈະມີຄົນບອກທຸກສິ່ງທີ່ເຈົ້າຕ້ອງທຳ'[11]ຂ້າພະເຈົ້າບໍ່ສາມາດເບິ່ງເຫັນໄດ້ເນື່ອງຈາກຄວາມສະຫວ່າງຂອງແສງນັ້ນ,
ດັ່ງນັ້ນຜູ້ທີ່ຢູ່ກັບຂ້າພະເຈົ້າໄດ້ຈູງມືຂ້າພະເຈົ້າເຂົ້າໄປໃນເມືອງດາມັສກັດ.
[12]ທີ່ນັ້ນຂ້າພຣະເຈົ້າໄດ້ພົບກັບຊາຍຄົນໜຶ່ງຊື່ອານາເນຍ, ເປັນຄົນສັດທາຕາມກົດບັນຍັດ ແລະມີຊື່ສຽງດີໃນໝູ່ຊາວຢິວທີ່ອາໄສຢູ່ທີ່ນັ້ນ.
[13]ເຂົາມາຫາຂ້າພະເຈົ້າ, ຢືນຢູ່ຂ້າງຂ້າພະເຈົ້າ ແລະ ເວົ້າວ່າ 'ອ້າຍໂຊໂລເອີຍ, ທ່ານຈົ່ງເຫັນເຖີດ.' ໃນທັນໃດນັ້ນຂ້າພະເຈົ້າກໍເບິ່ງເຫັນເຂົາ.
[14]ແລ້ວເຂົາກໍເວົ້າວ່າ, 'ພຣະເຈົ້າຂອງບັນພະບຸລຸດຂອງເຮົາໄດ້ເລືອກທ່ານໃຫ້ຮູ້ປະສົງຂອງພຣະອົງ, ເພື່ອທີ່ຈະເຫັນພຣະອົງຜູ້ຊອບທັມ, ແລະ
ໄດ້ຍິນສຽງທີ່ມາຈາກພຣະໂອດຂອງພຣະອົງ.[15]ເພາະທ່ານຈະເປັນພະຍານຝ່າຍພຣະອົງຕໍ່ທຸກຄົນຖືງສິ່ງທີ່ທ່ານໄດ້ເຫັນ ແລະໄດ້ຍິນ.[16]ແລະ
ບັດນີ້ເຫດໃດທ່ານຈຶ່ງລໍຖ້າຢູ່? ຈົ່ງລຸກຂຶ້ນ, ຮັບບັບຕິສະມາ ແລະ ຊຳລະຄວາມຜິດບາບຂອງທ່ານ, ດ້ວຍການເອີ້ນອອກພຣະນາມຂອງພຣະອົງ.'
[17]ຫລັງຈາກທີ່ຂ້າພຣະເຈົ້າກັບໄປກຸງເຢຣູຊາເລັມ, ແລະ ໃນຂະນະທີ່ຂ້າພະເຈົ້າກຳລັງອະທິຖານໃນພຣະວິຫານ,
ມີສິ່ງເກີດຂຶ້ນຄືຂ້າພະເຈົ້າໄດ້ຮັບນິມິດ.[18]ຂ້າພະເຈົ້າໄດ້ເຫັນພຣະອົງກ່າວກັບຂ້າພະເຈົ້າວ່າ 'ຈົ່ງຮີບອອກຈາກກຸງເຢຣູຊາເລັມໂດຍໄວ,
ເພາະພວກເຂົາຈະບໍ່ຍອມຮັບຄຳພະຍານຂອງເຈົ້າກ່ຽວກັບເຮົາ.'
[19]ຂ້າພຣະເຈົ້າຈຶ່ງເວົ້າວ່າ 'ພຣະຜູ້ເປັນເຈົ້າ, ພວກເຂົາເອງກໍຮູ້ວ່າຂ້າພະເຈົ້າໄດ້ຈອງຈຳ
ແລະຂ້ຽນຕີຜູ້ທີ່ເຊື່ອໃນພຣະອົງໃນທຳມະສາລາທຸກແຫ່ງ.[20]ເມື່ອໂລຫິດຂອງຊະເຕຟາໂນທີ່ເປັນພະຍານຂອງພຣະອົງໄດ້ລົ້ມລົງ,
ຂ້າພະເຈົ້າກໍຢືນຢູ່ໃກ້ໆ ແລະ ເຫັນຊອບ, ແລະ ຂ້າພະເຈົ້າໄດ້ເຝົ້າເສື້ອຜ້າຂອງຜູ້ທີ່ຂ້າເຂົາ.'[21]ແຕ່ພຣະອົງຕັດກັບຂ້າພະເຈົ້າວ່າ 'ຈົ່ງອອກໄປ,
ເພາະເຮົາຈະສົ່ງເຈົ້າໃຫ້ໄປໄກ ໄປຫາຄົນຕ່າງຊາດ. '"
[22]ພວກປະຊາຊົນຍອມຟັງ ໃຫ້ເຂົາກ່າວໃນຈຸດນີ້. ແຕ່ແລ້ວພວກເຂົາກໍຮ້ອງວ່າ "ເອົາຄົນເຊັ່ນນີ້ອອກໄປຈາກແຜ່ນດິນໂລກ,
ເພາະເຂົາບໍ່ສົມຄວນທີ່ຈະມີຊີວິດຢູ່."[23]ຂະນະທີ່ພວກເຂົາຮ້ອງກໍໂຍນເສື້ອຄຸມຂອງພວກເຂົາ ແລະ ໂຍນຝຸ່ນລະອອງຂຶ້ນໄປໃນອາກາດ,
[24]ນາຍພົນທະຫານຈຶ່ງສັ່ງໃຫ້ນຳໂປໂລເຂົ້າມາໃນປ້ອມທະຫານ. ເຂົາສັ່ງວ່າເຂົາຄວນຈະຖືກສອບສວນດ້ວຍການຂ້ຽນຕີ,
ເພື່ອໃຫ້ເຂົາຈະໄດ້ຮູ້ວ່າເປັນຫຍັງພວກເຂົາຈຶ່ງຕໍ່ຕ້ານເຂົາເຊັ່ນນັ້ນ.
[25]ເມື່ອພວກເຂົາເອົາເຊືອກໜັງມັດໂປໂລ, ໂປໂລໄດ້ກ່າວກັບນາຍຮ້ອຍທີ່ຢືນຢູ່ຂ້າງໆວ່າ, "ເປັນເລື່ອງຖືກຕ້ອງຕາມກົດໝາຍແລ້ວບໍ
ທີ່ທ່ານຂ້ຽນຕີຄົນທີ່ເປັນຊາວໂຣມ ແລະ ຍັງບໍ່ໄດ້ປະກາດວ່າເຮັດຜິດ?"[26]ເມື່ອນາຍຮ້ອຍໄດ້ຍິນດັ່ງນັ້ນ, ເຂົາໄດ້ໄປຫານາຍພົນ ແລະ ບອກເຂົາວ່າ
"ທ່ານຈະເຮັດແນວໃດໃນສິ່ງນີ້? ເນື່ອງຈາກຊາຍຜູ້ນີ້ເປັນຄົນສັນຊາດໂຣມ."
[27]ນາຍພົນຈຶ່ງໄດ້ມາ ແລະ ເວົ້າກັບເຂົາວ່າ "ຈົ່ງບອກເຮົາວ່າ, ທ່ານເປັນຄົນສັນຊາດໂຣມບໍ?" ໂປໂລກ່າວວ່າ, "ແມ່ນ"[28]ນາຍພົນຕອບວ່າ,
"ຈະຕ້ອງໃຊ້ເງິນຈຳນວນຫລາຍ ທີ່ເຮົາຈະໄດ້ຮັບສັນຊາດ." ແຕ່ໂປໂລກ່າວວ່າ,
"ຂ້າພະເຈົ້າເປັນຄົນສັນຊາດໂຣມແຕ່ກຳເນີດ."[29]ຈາກນັ້ນຄົນທັງຫລາຍທີ່ກຳລັງໄຕ່ສວນເຂົາກໍໄດ້ປ່ອຍເຂົາໄປທັນທີ. ນາຍພົນເອງກໍຢ້ານ,
ເມື່ອເຂົາໄດ້ຮຽນຮູ້ວ່າໂປໂລເປັນຄົນສັນຊາດໂຣມ, ເພາະເຂົາໄດ້ມັດເພິ່ນໄວ້.
[30]ໃນວັນຮຸ່ງຂຶ້ນ, ນາຍພົນທະຫານຕ້ອງການຮູ້ຄວາມຈິງກ່ຽວກັບຂໍ້ກ່າວຫາຂອງຊາວຢິວ ຕໍ່ຕ້ານໂປໂລ.
ດັ່ງນັ້ນເຂົາຈຶ່ງຖອດເຄື່ອງຈອງຈຳຂອງເຂົາອອກ ແລະ ສັ່ງໃຫ້ພວກຫົວໜ້າປະໂຣຫິດ ແລະ ບັນດາສະມາຊິກສະພາມາປະຊຸມກັນ.
ຈາກນັ້ນເຂົາກໍພາໂປໂລລົງມາ ແລະໃຫ້ເຂົາຢູ່ທ່າມກາງພວກເຂົາ.

 generated on Tue Jun 17 19:01:42 2025

23 [1]ໂປໂລຈ້ອງເບິ່ງໄປທີ່ສະມາຊິກສະພາ ແລະກ່າວ, "ພີ່ນ້ອງທັງຫລາຍ,
ຂ້າພະເຈົ້າມີຊີວິດຢູ່ຕໍ່ພຣະພັກພຣະເຈົ້າດ້ວຍຈິດສຳນຶກອັນດີທຸກຢ່າງຈົນເຖິງທຸກວັນນີ້."[2]ມະຫາປະໂຣຫິດອານາເນຍໄດ້ສັ່ງໃຫ້ຜູ້ທີ່ຢືນຢູ່ຂ້າງໆ
ໂປໂລຕົບປາກເພິ່ນ.[3]ຈາກນັ້ນໂປໂລໄດ້ກ່າວແກ່ເຂົາວ່າ, "ພຣະເຈົ້າຈະຊົງຕີທ່ານ, ທ່ານເປັນຝາທີ່ທາດ້ວຍປູນຂາວ
ທ່ານກຳລັງນັ່ງພິພາກສາຂ້າພະເຈົ້າຕາມກົດບັນຍັດ, ທັງຍັງສັ່ງໃຫ້ຕົບຕີຂ້າພະເຈົ້າຊຶ່ງເປັນການຕໍ່ຕ້ານກົດບັນຍັດບໍ?"

[4]ຄົນທີ່ຢືນຢູ່ໃກ້ໆ ກ່າວວ່າ, "ເຈົ້າກ້າເວົ້າໝິ່ນປະມາດມະຫາປະໂຣຫິດຂອງພຣະເຈົ້າໄດ້ແນວໃດ?[5]ໂປໂລກ່າວວ່າ,
"ພີ່ນ້ອງທັງຫລາຍຂ້າພຣະເຈົ້າບໍ່ຮູ້ວ່າເຂົາເປັນມະຫາປະໂຣຫິດ, ເພາະມີຄຳຂຽນໄວ້ວ່າ, ຢ່າເວົ້າຊົ່ວຮ້າຍຕໍ່ຜູ້ປົກຄອງຂອງເຈົ້າ."
[6]ເມື່ອໂປໂລເຫັນວ່າສ່ວນໜຶ່ງຂອງສະພາເປັນພວກຊາດູກາຍ ແລະ ພວກຟາຣີຊາຍອື່ນໆ, ເຂົາຈຶ່ງເວົ້າສຽງດັງໃນສະພາວ່າ, "ພີ່ນ້ອງທັງຫລາຍ,
ຂ້າພະເຈົ້າເປັນຟາຣີຊາຍ, ເປັນລູກຊາຍຂອງພວກຟາຣີຊາຍ. ທີ່ຂ້າພະເຈົ້າຖືກພິພາກສາ
ກໍເພາະຂ້າພະເຈົ້າໝັ້ນໃຈໃນຄວາມຫວັງໃນການຟື້ນຄືນຊີວິດຈາກຄວາມຕາຍ."[7]ເມື່ອເຂົາກ່າວເຊັ່ນນີ້,
ກໍເກີດການໂຕ້ຖຽງລະຫວ່າງພວກຟາຣີຊາຍ ແລະ ພວກຊາດູກາຍ ແລະ ຝູງຊົນກໍແຕກແຍກ.
[8]ເນື່ອງຈາກພວກຊາດູກາຍກ່າວວ່າບໍ່ມີການຟື້ນຄືນຊີວິດ, ບໍ່ມີທູດສະຫວັນ, ແລະ ບໍ່ມີວິນຍານ, ແຕ່ພວກຟາຣີຊາຍຮັບຮູ້ໃນສິ່ງທັງໝົດເຫລົ່ານີ້.
[9]ດັ່ງນັ້ນຈຶ່ງເກີດຄວາມອຶກກະທຶກຂຶ້ນຢ່າງໃຫຍ່, ແລະ ພວກທຳມະຈານບາງສ່ວນທີ່ຢູ່ໃນຝ່າຍພວກຟາຣີຊາຍໄດ້ຢືນຂຶ້ນ ແລະຖຽງກັນວ່າ,
"ເຮົາພົບວ່າຊາຍຜູ້ນີ້ບໍ່ມີຄວາມຜິດຫຍັງ. ຖ້າວິນຍານ ຫລື ທູດສະຫວັນຈະເວົ້າກັບເຂົາຈະເປັນຫຍັງໄປ?[10]ເມື່ອການໂຕ້ຖຽງເລີ່ມຮຸນແຮງຂຶ້ນ,
ນາຍພົນທະຫານຢ້ານວ່າໂປໂລຈະຖືກພວກເຂົາຈັບຈີກເປັນຕ່ອນໆ, ເຂົາຈຶ່ງສັ່ງໃຫ້ທະຫານລົງໄປ ແລະ ພາໂປໂລອອກຈາກໝູ່ສະມາຊິກສະພາ,
ແລະ ນຳເຂົາເຂົ້າໄປໃນຄ້າຍທະຫານ.
[11]ໃນຄືນຕໍ່ມາ ອົງພຣະຜູ້ເປັນເຈົ້າຊົງຢືນຢູ່ຂ້າງເຂົາ ແລະ ຕັດວ່າ, "ຢ່າຢ້ານເລີຍ, ເພາະເຈົ້າເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມ,
ດັ່ງນັ້ນເຈົ້າຕ້ອງເປັນພະຍານໃນກຸງໂຣມດ້ວຍ."
[12]ໃນເວລາຮຸ່ງເຊົ້າ, ມີພວກຢິວບາງຄົນໄດ້ເຮັດການ ການຕົກລົງ ແລະ ໄດ້ຮຽກຮ້ອງໃຫ້ສາບແຊ່ງຊາບພວກເຂົາ ໂດຍກ່າວວ່າພວກເຂົາຈະບໍ່ກິນ
ບໍ່ດື່ມສິ່ງໃດທັງໝົດຈົນກວ່າໄດ້ຂ້າໂປໂລ.[13]ຜູ້ທີ່ວາງແຜນການນີ້ມີຫລາຍກວ່າສີ່ສິບຄົນ.
[14]ພວກເຂົາໄດ້ເດີນທາງໄປຫາພວກຫົວໜ້າປະໂຣຫິດ ແລະ ພວກຜູ້ອາວຸດໂສ ແລະ ໄດ້ກ່າວວ່າ,
"ເຮົາໄດ້ມອບຕົວເອງຢູ່ພາຍໃຕ້ຄຳສາບແຊ່ງອັນໃຫຍ່ຫລວງ, ທີ່ຈະບໍ່ກິນອີຫຍັງຈົນກວ່າຈະໄດ້ຂ້າໂປໂລ.[15]ດັ່ງນັ້ນ,
ຈົ່ງໃຫ້ສະພາບອກນາຍພົນທີ່ຈະນຳເຂົາລົງໄປໃຫ້ແກ່ທ່ານ, ເພື່ອທ່ານຈະຕັດສິນຄະດີຂອງເຂົາໄດ້ຊັດເຈນຫລາຍຍິ່ງຂຶ້ນ. ສຳຫລັບພວກເຮົາ,
ພວກເຮົາພ້ອມທີ່ຈະຂ້າເຂົາກ່ອນທີ່ເຂົາຈະມາທີ່ນີ້."
[16]ແຕ່ບຸດຊາຍຂອງນ້ອງສາວໂປໂລໄດ້ຍິນວ່າພວກເຂົາກຳລັງຈັດຊາກຖ້າຢູ່, ດັ່ງນັ້ນເຂົາຈຶ່ງໄດ້ໄປ ແລະ ເຂົ້າໄປໃນປ້ອມທະຫານ ແລະ
ໄດ້ບອກໂປໂລ.[17]ໂປໂລຮ້ອງນາຍຮ້ອຍຄົນໜຶ່ງ ແລະ ກ່າວວ່າ, "ພາຊາຍໜຸ່ມຄົນນີ້ໄປຫານາຍພົນ,
ເພາະເຂົາມີບາງຢ່າງທີ່ຈະບອກແກ່ທ່ານນາຍພົນ."
[18]ດັ່ງນັ້ນນາຍຮ້ອຍຈຶ່ງຮັບຊາຍໜຸ່ມນີ້ໄປ ແລະ ໄດ້ນຳເຂົາໄປຫານາຍພົນ ແລະ ກ່າວວ່າ, "ໂປໂລຊຶ່ງເປັນນັກໂທດໄດ້ຮ້ອງຂ້າພະເຈົ້າໄປຫາເຂົາ,
ແລະ ໄດ້ຂໍໃຫ້ຂ້າພະເຈົ້ານຳຊາຍໜຸ່ມຄົນນີ້ມາຫາທ່ານ.
ເຂົາມີບາງສິ່ງທີ່ຈະບອກແກ່ທ່ານ."[19]ນາຍພົນຈຶ່ງຈັບມືຊາຍໜຸ່ມໄປຍັງສະຖານທີ່ສ່ວນຕົວ ແລະ ຖາມເຂົາວ່າ, "ທ່ານຈະບອກຫຍັງແກ່ເຮົາ?"
[20]ຊາຍໜຸ່ມກ່າວວ່າ, "ພວກຢິວໄດ້ຕົກລົງທີ່ຈະຂໍໃຫ້ທ່ານນຳໂປໂລໄປຍັງສະພາໃນມື້ອື່ນນີ້,
ໂດຍອ້າງກັບວ່າພວກເຂົາຈະສອບຄະດີຂອງເຂົາໃຫ້ຊັດເຈນຍິ່ງຂຶ້ນ.[21]ແຕ່ທ່ານຢ່າໃຫ້ພວກເຂົາ, ເພາະມີຊາຍຫລາຍກວ່າສີ່ສິບຄົນ
ທີ່ກຳລັງຈັດຊາກຕວົະຖ້າເຂົາຢູ່. ພວກເຂົາຖືກຮຽກຮ້ອງໃຫ້ສາບແຊ່ງຕົວພວກເຂົາເອງ, ວ່າຈະບໍ່ໃຫ້ກິນ ຫລື
ດື່ມຈົນກວ່າພວກເຂົາຈະໄດ້ຂ້າເຂົາ. ແມ້ວ່າຕອນນີ້ພວກເຂົາຕຽມພ້ອມ, ກຳລັງລໍຖ້າຄວາມຍິນຍອມຈາກທ່ານ."
[22]ດັ່ງນັ້ນນາຍພົນຈຶ່ງໃຫ້ຊາຍໜຸ່ມນັ້ນໄປ, ຫລັງຈາກແນະນຳເຂົາວ່າ,
"ຢ່າບອກໃຜວ່າເຈົ້າໄດ້ບອກເລື່ອງນີ້ແກ່ເຮົາ."[23]ຈາກນັ້ນເຂົາໄດ້ຮ້ອງນາຍຮ້ອຍສອງຄົນມາ ແລະ ກ່າວວ່າ, "ໃຫ້ຈັດກອງທະຫານສອງຮ້ອຍຄົນ
ແລະ ທະຫານມ້າເຈັດສິບຄົນ ແລະ ນາຍທະຫານຫອກສອງຮ້ອຍຄົນຕຽມພ້ອມທີ່ຈະເດີນທາງໄກໄປຍັງເມືອງກາຍຊາເຣຍ.
ທ່ານຈະອອກໃນເວລາເກົ້າໂມງຂອງຄືນນີ້."[24]ເຂົາຍັງໄດ້ສັ່ງໃຫ້ພວກເຂົາຈັດຕຽມສັດໃຫ້ໂປໂລຂີ່ ແລະ
ພາເຂົາໄປຫາເຟລິກຜູ້ປົກຄອງເມືອງຢ່າງປອດໄພ.
[25]ຈາກນັ້ນເຂົາກໍໄດ້ຂຽນຈົດໝາຍດັ່ງນີ້ວ່າ:[26]"ກລາວດີໂອລີເຊຍ ຮ້ອງທ່ານເຟລິກ ຜູ້ປົກຄອງເມືອງທີ່ຍອດຢ້ຽມທີ່ສຸດ.
[27]ຊາຍຜູ້ນີ້ຖືກຈັບໂດຍຊາວຢິວ ແລະ ກຳລັງຈະຖືກພວກເຂົາຂ້າຕາຍ, ເມື່ອຂ້າພຣະເຈົ້າມາຫາພວກເຂົາພ້ອມກັບກອງທະຫານ ແລະ
ຊ່ວຍເຂົາໄວ້, ເນື່ອງຈາກຂ້າພຣະເຈົ້າຮູ້ວ່າເຂົາເປັນຄົນສັນຊາດໂຣມ.
[28]ຂ້າພະເຈົ້າຢາກຈະຮູ້ວ່າເຫດໃດພວກເຂົາຈຶ່ງກ່າວຫາເຂົາ, ດັ່ງນັ້ນຂ້າພະເຈົ້າຈຶ່ງເອົາລາວລົງມາທີ່ສະພາ.
[29]ຂ້າພະເຈົ້າໄດ້ຮູ້ວ່າເຂົາກຳລັງຖືກກ່າວຫາກ່ຽວກົດໝາຍຂອງພວກເຂົາ, ແຕ່ບໍ່ມີຂໍ້ກ່າວຫາໃດທີ່ເຂົາສົມຄວນຕາຍ ຫລື ຖືກຄຸກ.
[30]ຈາກນັ້ນຂ້າພະເຈົ້າໄດ້ຮູ້ວ່າມີການວາງແຜນຕໍ່ຕ້ານຊາຍຄົນນີ້, ດັ່ງນັ້ນຂ້າພະເຈົ້າຈຶ່ງສົ່ງເຂົາມາຫາທ່ານທັນທີ, ແລະ
ສັ່ງໃຫ້ໂຈດຂອງເຂົານຳຄຳຟ້ອງທີ່ມີຕໍ່ເຂົາມາສະແດງຕໍ່ໜ້າທ່ານ."
[31]ດັ່ງນັ້ນເຫລົ່າທະຫານໄດ້ເຊື່ອຟັງຄຳສັ່ງຂອງພວກຜູ້ອາວຸດໂສ. ພວກເຂົາໄດ້ຮັບຕົວໂປໂລ ແລະ
ໄດ້ພາເຂົາໄປຍັງເມືອງອັນຕິປາຕີໃນເວລາກາງຄືນ.[32]ໃນວັນຕໍ່ມາ, ທະຫານສ່ວນໃຫຍ່ໄດ້ປະພວກທະຫານມ້າໃຫ້ໄປກັບໂປໂລ ແລະ
ພວກເຂົາເອງກໍໄດ້ກັບໄປຍັງປ້ອມທະຫານ.[33]ເມື່ອທະຫານມ້າ ມາເຖິງເມືອງກາຍຊາເຣຍ ແລະ ໄດ້ສົ່ງຈົດໝາຍໃຫ້ແກ່ຜູ້ປົກຄອງ,
ພວກເຂົາໄດ້ມອບໂປໂລໃຫ້ແກ່ທ່ານດ້ວຍ.
[34]ເມື່ອຜູ້ປົກຄອງໄດ້ອ່ານຈົດມາຍ, ເຂົາໄດ້ຖາມໂປໂລມາຈາກແຂວງໃດ ເມື່ອເຂົາຮູ້ວ່າໂປໂລມາຈາກກີລີເກຍ,[35]ເຂົາກ່າວວ່າ,
"ເຮົາຈະຟັງເຈົ້າຢ່າງເຕັມທີ່ເມື່ອໂຈດຂອງເຈົ້າມາທີ່ນີ້." ຈາກນັ້ນເຂົາກໍສັ່ງໃຫ້ຄຸມໂປໂລໄວ້ໃນພຣະລາດຊະວັງຂອງເຮໂຣດ;


generated on Tue Jun 17 19:01:42 2025

24 1ຫລັງຈາກຫ້າວັນ, ອານາເນຍມະຫາປະໂຣຫິດ, ພວກຜູ້ອາວຸດໂສ, ແລະ ນັກເວົ້າທີ່ມີຊື່ວ່າເຕຕູໂລໄດ້ໄປທີ່ນັ້ນ.
ຄົນເຫລົ່ານີ້ນໍາຄໍາຟ້ອງໂປໂລໄປໃຫ້ຜູ້ປົກຄອງ.2ເມື່ອໂປໂລຢືນຢູ່ຕໍ່ຫນ້າຜູ້ປົກຄອງເຕຕູໂລ ໄດ້ເລີ່ມຟ້ອງເຂົາ ແລະ ໄດ້ເວົ້າກັບຜູ້ປົກຄອງ,
"ເພາະທ່ານພວກເຮົາຈຶ່ງມີຄວາມສະຫງົບສຸກຫລາຍ, ແລະ ການເບິ່ງການໄກຂອງທ່ານ ນໍາການປະຕິຮູບທີ່ດີມາຍັງປະເທດຂອງເຮົາ;
3ດັ່ງນັ້ນເຮົາຈຶ່ງຍິນດີຮັບທຸກຢ່າງທີ່ທ່ານໄດ້ທໍາດ້ວຍການຂອບໃຈ, ທ່ານຟີລິກ.

4ເພື່ອທີ່ຂ້າພະເຈົ້າຈະບໍ່ໃຫ້ເສຍເວລາທ່ານເກີນໄປ, ຂ້າພະເຈົ້າຂໍໃຫ້ທ່ານໃຊ້ເວລາສັ້ນໆ ຟັງຂ້າພະເຈົ້າດ້ວຍຄວາມເມດຕາ.
5ເນື່ອງຈາກເຮົາໄດ້ພົບວ່າຊາຍຄົນນີ້ຈະເປັນຄົນຍຸແຍ່ ເຮັດໃຫ້ເກີດການກະບົດ ແລະ ເປັນສາເຫດທີ່ເຮັດໃຫ້ຊາວຢິວທຸກຄົນທົ່ວໂລກວຸ້ນວາຍ.
ເຂົາເປັນຜູ້ນໍາຂອງລັດທິນາຊາເຣັດ.6ເຂົາຍັງພະຍາຍາມທີ່ຈະທໍາລາຍພຣະວິຫານ, ດັ່ງນັ້ນເຮົາຈຶ່ງຈັບກຸມເຂົາໄວ້.
78ເມື່ອທ່ານຖາມໂປໂລກ່ຽວກັບເລື່ອງເຫລົ່ານີ້, ທ່ານກໍຈະຮູ້ວ່າເຮົາກ່າວຫາເຂົາດ້ວຍເລື່ອງຫຍັງ"9ພວກຊາວຢິວກໍຮ່ວມກັນກ່າວຫາໂປໂລ, ແລະ
ຢືນຢັນວ່າສິ່ງເຫລ່ານີ້ເປັນຄວາມຈິງ.
10ແຕ່ເມື່ອຜູ້ປົກຄອງໄດ້ໃຫ້ໂປໂລເວົ້າ ໂປໂລຕອບວ່າ, "ຂ້າພະເຈົ້າຮູ້ວ່າທ່ານເປັນຜູ້ພິພາກສາແກ່ຊາດນີ້ມາຫລາຍປີແລ້ວ, ດັ່ງນັ້ນ
ຂ້າພະເຈົ້າຍິນດີທີ່ຈະອະທິບາຍກ່ຽວກັບຕົວຂ້າພະເຈົ້າແກ່ທ່ານ.
11ທ່ານສາມາດກວດສອບໄດ້ວ່າຕັ້ງແຕ່ທີ່ຂ້າພະເຈົ້າຂຶ້ນໄປນະມັດສະການທີ່ກຸງເຢຣູຊາເລມບໍ່ເກີນສິບສອງວັນ.
12ເມື່ອພວກເຂົາພົບຂ້າພຣະເຈົ້າໃນພະວິຫານຂ້າພະເຈົ້າບໍ່ໄດ້ໂຕ້ຖຽງກັບໃຜ, ແລະ ບໍ່ໄດ້ຍຸຍົງໃຜໃນທໍາມະສາລາ ຫລືໃນເມືອງ.
13ພວກເຂົາບໍ່ສາມາດພິສູດຂໍ້ກ່າວຫາທີ່ພວກເຂົາຟ້ອງຮ້ອງຂ້າພະເຈົ້າແກ່ທ່ານໄດ້ ດັ່ງນັ້ນພວກເຂົາຈຶ່ງຕໍ່ຕ້ານຂ້າພະເຈົ້າໃນເວລານີ້.
14ແຕ່ຂ້າພະເຈົ້າຍອມຮັບສິ່ງນີ້ຕໍ່ທ່ານວ່າຕາມທາງທີ່ພວກເຂົາຮ້ອງວ່ານິກາຍນັ້ນ,
ໃນທາງດຽວກັນຂ້າພະເຈົ້າຮັບໃຊ້ພຣະເຈົ້າຂອງບັນພະບຸລຸດຂອງເຮົາ ຂ້າພະເຈົ້າສັດຊື່ຕໍ່ທຸກສິ່ງທີ່ຢູ່ໃນທໍາບັດຍັດ ແລະ
ຄໍາພະຍາກອນທີ່ໄດ້ຂຽນໄວ້.15ຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງດຽວກັນໃນພະເຈົ້າເຊັ່ນດຽວກັນກັບຄົນເຫລົ່ານີ້ເຝົ້າລໍຖ້າ
ການຟື້ນຂຶ້ນຈາກຄວາມຕາຍຂອງທັງຜູ້ຊອບທໍາ ແລະ ຜູ້ບໍ່ຊອບທໍາ.16ໃນເລື່ອງນີ້ ຂ້າພະເຈົ້າໄດ້ທໍາງານດ້ວຍຈິດສໍານຶກຊັດເຈນຕໍ່ໜ້າພຣະເຈົ້າ
ແລະ ມະນຸດ.
17ຕອນນີ້ຫລັງຈາກຫລາຍປີຜ່ານໄປ ຂ້າພະເຈົ້ານໍາການຊ່ວຍເຫລືອ ແລະ ຂອງປະທານໃນເລື່ອງເງິນທອງມາຍັງຊົນຊາດຂອງຂ້າພະເຈົ້າ.
18ເມື່ອຂ້າພະເຈົ້າເຮັດເຊັ່ນນີ້, ພວກຢິວບາງຄົນຈາກແຄວັ້ນເອເຊຍໄດ້ພົບຂ້າພະເຈົ້າໃນພິທີຊໍາລະຕົວໃຫ້ບໍລິສຸດໃນພຣະວິຫານ,
ບໍ່ໄດ້ຢູ່ກັບຝູງຊົນ ຫລື ຄວາມວຸ້ນວາຍ.19ຫາກຄົນເຫລົ່ານີ້ມີສິ່ງໃດພວກເຂົາຄວນຢູ່ຕໍ່ໜ້າທ່ານ ແລ ະກ່າວສິ່ງທີ່ພວກເຂົາຕໍ່ຕ້ານຂ້າພະເຈົ້າ.
20ຫລື ຄົນເຫລົ່ານີ້ຄວນເວົ້າໃນສິ່ງທີ່ຜິດທີ່ພວກເຂົາພົບໃນຂ້າພະເຈົ້າ ເມື່ອຂ້າພະເຈົ້າຢືນຢູ່ຕໍ່ຫນ້າສະພາຢິວ,
21ວັ້ນແຕ່ວ່າເປັນເລື່ອງກ່ຽວກັບສິ່ງຫນຶ່ງທີ່ຂ້າພະເຈົ້າເວົ້າສຽງດັງ ເມື່ອຂ້າພະເຈົ້າຢືນຢູ່ທ່າມກາງພວກເຂົາ,
'ມັນເປັນເລື່ອງກ່ຽວກັບການຟື້ນຄືນຈາກຄວາມຕາຍທີ່ຂ້າພະເຈົ້າຖືກທ່ານຕັດສິນໃນວັນນີ້."
22ແລ້ວເຟລິກ, ໄດ້ຮູ້ເລື່ອງລາວກ່ຽວທາງນັ້ນເປັນຢ່າງດີແລ້ວ, ເຂົາຈຶ່ງເລື່ອນການພິຈາລະນາ ເຂົາກ່າວວວ່າ, "ເມື່ອໃດກໍຕາມທີ່ລີເຊຍ
ຜູ້ບັນຊາການລົງມາຈາກກຸງເຢຣູຊາເລັມ, ເຮົາຈະຕັດສິນຄະດີຂອງທ່ານ."23ຈາກນັ້ນເຂົາໄດ້ສັ່ງນາຍຮ້ອຍຄຸມຕົວໂປໂລ,
ແຕ່ໃຫ້ມີອິດສະລະບາງຢ່າງ ແລະ ຫ້າມບໍ່ໃຫ້ໃຜຢຸດເພື່ອນສະຫາຍຂອງເຂົາຈາກການຊ່ວຍເຫລືອຫລືຢ້ຽມຢາມເຂົາ
24ຫລັງຈາກນັ້ນຫລາຍວັນ, ເຟລິກໄດ້ກັບມາພ້ອມກັບດູຊີນລາເມຍຂອງເຂົາ, ຊຶ່ງເປັນຄົນຢິວ, ແລະ ເຂົາໄປຮ້ອງໂປໂລ ແລະ
ຟັງເລື່ອງລາວກ່ຽວກັບຄວາມເຊື່ອໃນພຣະເຢຊູຄຣິດເຈົ້າຈາກເຂົາ.25ແຕ່ເມື່ອໂປໂລໃຫ້ເຫດຜົນກ່ຽວກັບຄວາມຊອບທໍາ, ການຄວບຄຸມຕົນເອງ,
ແລະ ການພິພາກສາທີ່ຈະມາ, ເຟລິກກໍຢ້ານ ແລະ ໄດ້ກ່າວວ່າ "ຕອນນີ້ຈົ່ງອອກໄປກ່ອນ ເມື່ອມີໂອກາດເຮົາຈະສົ່ງໃຫ້ແກ່ທ່ານ."
26ໃນຂະນະດຽວກັນ, ເຂົາກໍຫວັງວ່າໂປໂລຈະໃຫ້ເງິນແກ່ເຂົາ, ດັ່ງນັ້ນເຂົາຈຶ່ງມັກສົ່ງໃຫ້ໂປໂລ ແລະ ໂອ້ລົມກັບເຂົາ.27ແຕ່ເມື່ອສອງປີຜ່ານໄປ,
ໂປກີໂອເຟຊະໂຕມາເປັນຜູ້ປົກຄອງຕໍ່ຈາກເຟລິກ, ແຕ່ເຟລິກຕ້ອງການການສະຫນັບສະຫນູນກັບຊາວຢິວ,
ດັ່ງນັ້ນເຂົາຈຶ່ງປະໂປໂລໃຫ້ຢູ່ພາຍໃຕ້ການຄວບຄຸມຕໍ່ໄປ.

25 [1]ຕອນນີ້, ເຟຊະໂຕເຂົ້າມາໃນແຄ້ວນ, ແລະຫລັງຈາກນັ້ນສາມວັນ, ເຂົາໄດ້ອອກຈາກເມືອງກາຍຊາເຣຍໄປຍັງກຸງເຢຣູຊາເລັມ.
[2]ແລະພວກເຂົາເວົ້າກັບເຟຊະໂຕຢ່າງຮຸນແຮງ.[3]ແລະ ພວກເຂົາຂໍຄວາມກະລຸນາເຟຊະໂຕກ່ຽວເນື່ອງກັບໂປໂລ
ວ່າໃຫ້ເຂົາຮ້ອງໂປໂລໄປຍັງກຸງເຢຣູຊະເລັມ ເພື່ອທີ່ພວກເຂົາຈະສາມາດຂ້າໂປໂລລະຫວ່າງທາງ.

[4]ແຕ່ເຟຊະໂຕໄດ້ຕອບວ່າໂປໂລເປັນນັກໂທດໃນເມືອງກາຍຊາເຣຍ, ແລະ ເຂົາ ເອງກໍຈະກັບໄປທີ່ນັ້ນໃນໄວໆ.[5]ເຂົາກ່າວວ່າ
"ຖ້າຊາຍຜູ້ນີ້ມີຄວາມຜິດຢ່າງໃດຢ່າງຫນຶ່ງ, ດັ່ງນັ້ນກໍໃຫ້ຜູ້ທີ່ສາມາດໄປກັບເຮົາໄປຟ້ອງຮ້ອງເຂົາທີ່ນັ້ນເຖີດ."
[6]ຫລັງຈາກທີ່ເຂົາພັກຢູ່ໄດ້ແປດ ຫລື ສິບວັນເຂົາກໍລົງໄປຍັງກາຍຊາເຣຍ, ແລະ ວັນຕໍ່ມາເຂົານັ່ງຢູ່ເທິງບັນລັງພິພາກສາ ແລະ
ສັ່ງໃຫ້ນໍາໂປໂລມາໃຫ້ເຂົາ.[7]ເມື່ອເຂົາມາເຖິງ, ຊາວຢິວຈາກກຸງເຢຣູຊະເລັມໄດ້ຢືນຢູ່ໃກ້ໆ, ແລະ
ເຂົານໍາຂໍ້ກ່າວຫາຮ້າຍແຮງຫລາຍຢ່າງທີ່ພວກເຂົາບໍ່ສາມາດພິສູດໄດ້[8]ໂປໂລປົກປ້ອງຕົນເອງ ແລະ ກ່າວວ່າ"ຂ້າພຣະເຈົ້າບໍ່ໄດ້ກະທໍາສິ່ງໃດ
ທີ່ຕໍ່ຕ້ານກົດຫມາຍຂອງຊາວຢິວ ຫລື ຕໍ່ຕ້ານພຣະວິຫານ ຫລື ຕໍ່ຕ້ານຈັກກະພັດ"
[9]ແຕ່ເຟຊະໂຕຕ້ອງການທີ່ຈະໄດ້ຮັບການສະຫນັບສະຫນູນຂອງຊາວຢິວ, ດັ່ງນັ້ນເຂົາຈຶ່ງຕອບໂປໂລ ແລະ ກ່າວວ່າ,
"ເຈົ້າຕ້ອງການຂຶ້ນໄປຍັງກຸງເຢຣູຊເລັມ ແລະ ໃຫ້ເຂົາຕັດສິນກ່ຽວກັບສິ່ງເຫລົ່ານີ້ທີ່ນັ້ນບໍ?"[10]ໂປໂລກ່າວວ່າ "ຂ້າພະເຈົ້າຢືນຢູ່ຫນ້າບັນລັງພິ
ພາກສາ ຂອງຈັກກະພັດທີ່ຂ້າພະເຈົ້າຈະຕ້ອງຮັບການຕັດສິນ. ຂ້າພະເຈົ້າບໍ່ໄດ້ເຮັດສິ່ງໃດຜິດຕໍ່ຊາວຢິວ ທ່ານກໍຮູ້ດີຢູ່ແລ້ວ.
[11]ຖ້າຂ້າພະເຈົ້າໄດ້ກະທໍາຜິດ ແລະ ກະທໍາສິ່ງທີ່ສົມຄວນຕາຍ, ຂ້າພະເຈົ້າຈະບໍ່ປະຕິເສດການຕາຍເລີຍ.
ແຕ່ຖ້າຂໍ້ກ່າວຫາຂອງພວກເຂົາບໍ່ໄດ້ມີຫຍັງ ກໍບໍ່ມີໃຜອາດສົ່ງມອບຂ້າພະເຈົ້າໄປໃຫ້ພວກເຂົາໄດ້. ຂ້າພະເຈົ້າຈະຂໍອຸທອນເຖິງຈັກກະພັດ.
[12]ຫລັງຈາກທີ່ເຟຊະໂຕໄດ້ໂອ້ລົມກັບສະພາແລ້ວ, ເຂົາຕອບວ່າ,"ເຈົ້າອຸທອນຕໍ່ຈັກກະພັດ. ກໍຈະຕ້ອງໄປຫາຈັກກະພັດ!"
[13]ຫລັງຜ່ານໄປຫລາຍວັນ, ກະສັດອັກຄິປາກັບ ພຣະນາງເບນີເກ ກໍມາທີ່ເມືອງກາຍຊາເຣຍເພື່ອຢ້ຽມຢາມເຟຊະໂຕຢ່າງເປັນທາງການ.
[14]ຫລັງຈາກທີ່ເຂົາຢູ່ທີ່ນັ້ນຫລາຍວັນ, ເຟຊາໂຕໄດ້ສະເຫນີຄະດີຂອງໂປໂລແກ່ກະສັດ; ເຂົາກ່າວວ່າ "ມີຊາຍຄົນຫນຶ່ງ
ຊຶ່ງເຟລິກໄດ້ຂັງເປັນນັກໂທດຖິ້ມໄວ້ທີ່ນີ້.[15]ເມື່ອຂ້າພຣະເຈົ້າຢູ່ໃນກຸງເຢຣູຊາເລັມພວກຫົວຫນ້າປະໂລຫິດ ແລະ
ພວກຜູ້ອາວຸດໂສຂອງຊາວຢິວນໍາຄໍາຟ້ອງຮ້ອງກ່າວໂທດຊາຍຜູ້ນີ້ຕໍ່ຂ້າພະເຈົ້າ, ແລະ ພວກເຂົາກໍຂໍໃຫ້ຂ້າພະເຈົ້າລົງໂທດເຂົາ.
[16]ຂ້າພະເຈົ້າໄດ້ກ່າວຕໍ່ເລື່ອງນີ້ວ່າບໍ່ແມ່ນທໍານຽມທີ່ຊາວໂຣມຈະມອບສົ່ງຜູ້ໃດ ກ່ອນທີ່ຊາຍຜູ້ທີ່ຖືກກ່າວຫານັ້ນ
ຄວນມີໂອກາດທີ່ຈະປະເຊີນກັບໂຈດຂອງເຂົາ ແລະ ປົກປ້ອງຕົວເອງເພື່ອແກ້ຂໍ້ກ່າວຫານັ້ນ.
[17]ດັ່ງນັ້ນ, ເມື່ອພວກເຂົາມາລວມຕົວກັນທີ່ນີ້, ຂ້າພະຈະບໍ່ລໍຊ້າ, ແຕ່ວັນຕໍ່ມາຂ້າພະເຈົ້າໄດ້ນັ່ງຢູ່ບັນລັງພິພາກສາ ແລະ
ສັ່ງໃຫ້ນໍາຊາຍຄົນນັ້ນເຂົ້າມາ.[18]ເມື່ອໂຈດຢືນຂຶ້ນ ແລະ ກ່າວຫາເຂົາ, ຂ້າພະເຈົ້າຄິດວ່າບໍ່ມີຂໍ້ກ່າວຫາໃດ
ເຂົາຈະນໍາມາກ່າວຫາເຂົາເປັນເລື່ອງຮ້າຍແຮງ.[19]ແຕ່ພວກເຂົາກັບນໍາສະເຫນີຂໍ້ພິພາກກ່ຽວກັບສາດສະນາຂອງຕົນເອງ ແລະ
ກ່ຽວກັບພຣະເຢຊູທີ່ຕາຍໄປແລ້ວເຊິ່ງໂປໂລອ້າງວ່າຍັງມີຊີວິດຢູ່.[20]ຂ້າພະເຈົ້າສັບສົນວ່າຈະກວດສອບເລື່ອງນີ້ຢ່າງໃດ ແລະ
ຂ້າພະເຈົ້າຖາມເຂົາວ່າ ເຂົາຕ້ອງການຈະໄປຍັງກຸງເຢຣູຊາເລັມເພື່ອຮັບຄໍາຕັດສິນຄະດີເຫລົ່ານີ້ທີ່ນັ້ນຫລືບໍ່?
[21]ແຕ່ເມື່ອໂປໂລຮຽກຮ້ອງໃຫ້ຢູ່ພາຍໃຕ້ການຄວບຄຸມຕົວເພື່ອການຕັດສິນໃຈຂອງຈັກກະພັດ,
ຂ້າພຣະເຈົ້າໄດ້ສັ່ງໃຫ້ເຂົາຢູ່ພາຍໃຕ້ການຄວບຄຸມຕົວຈົນກວ່າຂ້າພະເຈົ້າຈະສົ່ງເຂົາໄປຫາຈັກກະພັດ."[22]ອັກຄຣິປາຈຶ່ງກ່າວແກ່ເຟຊາໂຕວ່າ,
"ຂ້າພະເຈົ້າຢາກຟັງຊາຍຄົນນີ້ດ້ວຍ" ເຟຊາໂຕກ່າວ "ມື້ອື່ນ," ທ່ານຈະໄດ້ຍິນເຂົາ."
[23]ໃນມື້ຕໍ່ມາ ອັກຄຣິປາ ແລະ ນາງເບນີເກໄດ້ສະເດັດມາພ້ອມກັບພິທີຫລາກຫລາຍ; ພວກເຂົາເຂົ້າມາໃນຫ້ອງໂຖງກັບເຈົ້າຫນ້າທີ່ທະຫານແລະ
ກັບຄົນທີ່ມີຊື່ສຽງຂອງເມືອງ. ເມື່ອເຟຊາໂຕອອກຄໍາສັ່ງ ໂປໂລກໍຖືກນໍາມາຍັງພວກເຂົາ.[24]ເຟຊາໂຕກ່າວວ່າ, "ກະສັດອັກຄຣິປາ,
ແລະທ່ານທຸກຄົນທີ່ຢູ່ທີ່ນີ້ກັບເຮົາທ່ານເຫັນຜູ້ຊາຍຄົນນີ້ ທີ່ຄົນຢິວທັງຫລາຍພາກັນມາປຶກສາກັບຂ້າພະເຈົ້າໃນເຢຣູຊາເລັມ ແລະ ທີ່ນີ້ ແລະ
ພວກເຂົາຮ້ອງໃຫ້ຂ້າພຣະເຈົ້າວ່າເຂົາບໍ່ຄວນມີຊີວິດຢູ່ອີກຕໍ່ໄປ.
[25]ຂ້າພະເຈົ້າຮູ້ວ່າເຂົາບໍ່ໄດ້ເຮັດຜິດທີ່ສົມຄວນແກ່ຄວາມຕາຍ; ແຕ່ເປັນເພາະເຂົາໄດ້ອຸທອນຕໍ່ຈັກກະພັດ,
ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈຈະສົ່ງເຂົາໄປ.[26]ແຕ່ຂ້າພະເຈົ້າບໍ່ມີສິ່ງໃດທີ່ຈະຂຽນລະບຸໃຫ້ຊັດເຈນເຖິງຈັກກະພັດ. ດ້ວຍເຫດນີ້,
ຂ້າພະເຈົ້າຈຶ່ງໄດ້ນໍາເຂົາມາໃຫ້ແກ່ທ່ານ ໂດຍສະເພາະຢ່າງຍິ່ງທ່ານອັກຄຣິປາ
ເພື່ອທີ່ວ່າຂ້າພະເຈົ້າຈະມີຫຍັງບາງຢ່າງທີ່ຈະຂຽນກ່ຽວກັບຄະດີດັ່ງກ່າວນີ້.[27]ເພາະເບິ່ງຄືວ່າບໍ່ມີເຫດຜົນສໍາລັບຂ້າພຣະເຈົ້າ ທີ່ຈະສົ່ງນັກໂທດ
ແລະ ບໍ່ໄດ້ລະບຸຂໍ້ກ່າວຫາເຂົາ."


generated on Tue Jun 17 19:01:42 2025

26 1 ດັ່ງນັ້ນອັກຄຣິປາຈຶ່ງກ່າວແກ່ໂປໂລ, "ເຈົ້າຈົ່ງເວົ້າແທນຕົວເຈົ້າເອງ." ແລ້ວໂປໂລຈຶ່ງຍື່ນມືອອກມາ ແລະ ໃຫ້ການປົກປ້ອງຕົນເອງ.
2 "ຂ້າພະອົງມີຄວາມຍິນດີເປັນຢ່າງຍິ່ງ, ກະສັດອັກຄຣິປາ, ທີ່ ໄດ້ແກ້ຄະດີຕໍ່ຫນ້າພຣະອົງກັບຂໍ້ກ່າວຫາທັງຫມົດຂອງຊາວຢິວ;
3 ໂດຍສະເພາະຢ່າງຍິ່ງພຣະອົງເປັນຜູ້ຊ່ຽວຊານໃນປະເພນີ ແລະ ບັນຫາທຸກຢ່າງຂອງຊາວຢິວ.
ດັ່ງນັ້ນຂ້າພຣະອົງຈຶ່ງຂໍໃຫ້ພຣະອົງໂປດອົດທົນຟັງຂ້າພຣະອົງດ້ວຍ.

4 ແທ້ຈິງແລ້ວ, ພວກຊາວຢິວທຸກຄົນຕ່າງກໍຮູ້ດີວ່າຂ້າພຣະອົງດຳເນີນຊີວິດຢ່າງໃດຕັ້ງແຕ່ໄວຫນຸ່ມໃນຕ່າງປະເທດຂອງຕົນເອງ ແລະ
ທີ່ກຸງເຢຣູຊາເລັມ. 5 ພວກເຂົາຮູ້ຈັກຂ້າພະອົງຕັ້ງແຕ່ເລີ່ມຕົ້ນ ແລະ
ພວກເຂົາຄວນຈະຍອມຮັບຂ້າພະອົງຢູ່ໃນສະຖານະເປັນພວກຄະນະຟາຣີຊາຍ, ທີ່ເຂັ້ມງວດໃນການນັບຖືສາສະຫນາຂອງພວກເຮົາ.
6 ບັດນີ້ ຂ້າພະອົງຢືນຢູ່ທີ່ນີ້ເພື່ອຮັບການຕັດສິນເພາະຂ້າພະອົງເບິ່ງຫາພຣະສັນຍາພຣະເຈົ້າໄດ້ຊົງກະທຳກັບບັນພະບຸລຸດຂອງພວກເຮົາ.
7 ນີ້ເປັນພຣະສັນຍາສິບສອງເຜົ່າຂອງເຮົາທີ່ຫວັງວ່າຈະໄດ້ເມື່ອພວກເຂົານະມັດສະການພຣະເຈົ້າຢ່າງເອົາຈິງເອົາຈັງຕະຫລອດທັງວັນ ແລະຄືນ.
ດ້ວຍຄວາມຫວັງນີ້ເອງ, ກະສັດອັກຄຣິປາເອີຍ, ທີ່ພວກຢິວຟ້ອງຂ້າພະອົງ.
8 ເຫດໃດພວກທ່ານຈຶ່ງຄິດວ່າມັນເປັນເລື່ອງເຫລືອເຊື່ອທີ່ພຣະເຈົ້າຈະເຮັດໃຫ້ຄົນຕາຍຟື້ນຄືນມາມີຊີວິດບໍ່ໄດ້?
9 ຄັ້ງຫນຶ່ງ ຂ້າພະອົງຄິດກັບຕົວເອງວ່າຂ້າພະອົງຄວນຈະເຮັດຫລາຍສິ່ງຫລາຍຢ່າງທີ່ຕໍ່ຕ້ານພຣະນາມຂອງພຣະເຢຊູຊາວນາຊາເຣັດ.
10 ຂ້າພະອົງໄດ້ກະທຳສິ່ງເຫລົ່ານີ້ໃນກຸງເຢຣູຊາເລັມ.
ຂ້າພະອົງໄດ້ຈັບຜູ້ເຊື່ອຈຳນວນຫລາຍຄຸມຂັງດ້ວຍສິດອຳນາດທີ່ຂ້າພະອົງໄດ້ຮັບຈາກພວກຫົວຫນ້າປະໂຣຫິດ, ແລະ ເມື່ອພວກເຂົາຖືກຂ້າຕາຍ,
ຂ້າພະອົງກໍໄດ້ອອກສຽງຕໍ່ຕ້ານພວກເຂົາ. 11 ຂ້າພະອົງໄດ້ລົງໂທດພວກເຂົາຢູ່ຫລາຍຕໍ່ຫລາຍຄັ້ງໃນທຸກທຳມະສາລາ ແລະ
ຂ້າພະອົງພະຍາຍາມທີ່ຈະບັງຄັບໃຫ້ພວກເຂົາຫມິ່ນປະຫມາດ. ຂ້າພະອົງໂກດແຄ້ນພວກເຂົາຢ່າງຮ້າຍ ແລະ
ຂ້າພະອົງໄດ້ຂົ່ມເຫັງພວກເຂົາແມ້ແຕ່ທີ່ຕ່າງເມືອງ.
12 ຂະນະທີ່ຂ້າພະອົງກຳລັງເຮັດເຊັ່ນນີ້, ຂ້າພະອົງໄດ້ໄປຍັງເມືອງດາມັສກັດດ້ວຍສິດອຳນາດແລະ ຄຳສັ່ງຂອງພວກຫົວຫນ້າປະໂຣຫິດ; 13 ແລະ
ເສັ້ນທາງທີ່ໄປທີ່ນັ້ນ, ໃນທັນໃດນັ້ນ, ກະສັດອັກຄຣິປາເອີຍ, ຂ້າພະອົງໄດ້ເຫັນແສງສະຫວ່າງຈາກສະຫວັນທີ່ສະຫວ່າງຈ້າກວ່າດວງອາທິດ ແລະ
ມັນໄດ້ສ່ອງຢູ່ຮອບທັງຕົວຂ້າພະອົງ. 14 ເມື່ອພວກເຮົາທຸກຄົນລົ້ມລົງກັບພື້ນ, ຂ້າພະອົງໄດ້ຍິນສຽງເວົ້າກັບຂ້າພະອົງກ່າວເປັນສຽງພາສາເຮັບເຣີວ່າ
"ໂຊໂລ, ໂຊໂລເອີຍ ເຈົ້າຂົ່ມເຫັງເຮົາເຮັດຫຍັງ? ຊຶ່ງເຈົ້າເຮັດໃຫ້ເຈັບຕົວເອງລ້າໆ.'
15 ແລ້ວຂ້າພະອົງກໍເວົ້າວ່າ, 'ພຣະອົງເຈົ້າ, ພຣະອົງເປັນຜູ້ໃດ? ອົງພຣະຜູ້ເປັນເຈົ້າຕອບວ່າ 'ເຮົາຄືເຢຊູຜູ້ທີ່ເຈົ້າໄດ້ຂົ່ມເຫັງ. 16 ບັດນີ້ຈົ່ງລຸກຂຶ້ນ ແລະ
ຢືນຢູ່ດ້ວຍຕີນຂອງເຈົ້າ; ເພາະຈຸດປະສົງເຮົາໄດ້ປາກົດແກ່ເຈົ້າ ເພື່ອແຕ່ງຕັ້ງໃຫ້ເຈົ້າເປັນຜູ້ຮັບໃຊ້ ແລະ ເປັນພະຍານເຖິງສິ່ງທີ່ເຈົ້າຮູ້ກ່ຽວກັບເຮົາ
ແລະ ສິ່ງທີ່ເຮົາຈະສຳແດງກັບເຈົ້າໃນພາຍພາກຫນ້າ. 17 ແລະ ເຮົາຈະຊ່ວຍເຈົ້າຈາກຜູ້ຄົນ ແລະ ຈາກຄົນຕ່າງຊາດທີ່ເຮົາສົ່ງມາໃຫ້ແກ່ເຈົ້າ,
18 ເພື່ອເປີດຕາຂອງພວກເຂົາ ແລະເຮັດໃຫ້ພວກເຂົາຫັນຈາກຄວາມມືດມາສູ່ຄວາມສະຫວ່າງ ແລະ ຈາກອຳນາດຂອງຊາຕານມາຫາພຣະເຈົ້າ,
ເພື່ອທີ່ວ່າພວກເຂົາໄດ້ຮັບການອະໄພໃນຄວາມບາບຈາກພຣະເຈົ້າ ແລະ
ມໍຣະດົກທີ່ເຮົາມອບໃຫ້ກັບຄົນທັງຫລາຍທີ່ຖືກແຍກໄວ້ແລ້ວໂດຍຄວາມເຊື່ອໃນເຮົາ.'
19 ດັ່ງນັ້ນ, ກະສັດອັກຄຣິປາເອີຍ, ຂ້າພະອົງຈຶ່ງເຊື່ອຟັງນິມິດຈາກສະຫວັນ; 20 ແຕ່ໂດຍເລີ່ມຕົ້ນກັບໃນເມືອງດາມັສກັດກ່ອນ
ແລະຕໍ່ຈາກນັ້ນໃນເຢຣູຊາເລັມແລະທົ່ວແຂວງຢູດາຍແລະໄປຍັງຄົນຕ່າງຊາດດ້ວຍ, ຂ້າພະອົງໄດ້ກ່າວຖ້ອຍຄຳແກ່ພວກເຂົາ
ເພື່ອວ່າພວກເຂົາຈະໄດ້ກັບໃຈ ແລະ ຫັນຫນ້າຫາພຣະເຈົ້າ, ກະທຳຄວາມດີໃຫ້ສົມຄວນກັບການກັບໃຈ.
21 ດ້ວຍເຫດນີ້ຊາວຢິວຈຶ່ງໄດ້ຈັບຂ້າພະອົງໃນພຣະວິຫານ ແລະ ພະຍາຍາມທີ່ຈະຂ້າ ຂ້າພະອົງເສຍ.
22 ດັ່ງນັ້ນຂ້າພະເຈົ້າຢືນຢູ່ ແລະ ເປັນພະຍານຕໍ່ຄົນທັງຫລາຍ ແລະ ຄົນທີ່ເປັນໃຫຍ່ ຊຶ່ງບໍ່ມີຫຍັງຫລາຍກວ່າເລື່ອງທີ່ຜູ້ເຜີຍພຣະວັດຈະນະ ແລະ
ໂມເສໄດ້ກ່າວໄວ້ວ່າຈະເກີດຂຶ້ນ; 23 ວ່າພຣະຄຣິດຈະຕ້ອງທົນທຸກທໍລະມານ, ແລະ ພຣະອົງຈະເປັນຄົນທຳອິດທີ່ຟື້ນຈາກຄວາມຕາຍ ແລະ
ປະກາດເຖິງຄວາມສະຫວ່າງແກ່ຊາວຢິວ ແລະ ຄົນຕ່າງຊາດ."
24 ເມື່ອໂປໂລໄດ້ສຳເລັດການແກ້ຕ່າງເຂົາແລ້ວ, ເຟສທັສໄດ້ກ່າວດ້ວຍສຽງອັນດັງວ່າ, "ໂປໂລເອີຍ, ເຈົ້າບ້າໄປແລ້ວ;
ຄວາມຮູ້ອັນຫລວງຫລາຍຂອງເຈົ້າເຮັດໃຫ້ເຈົ້າບ້າໄປແລ້ວ." 25 ແຕ່ໂປໂລກ່າວວ່າ, "ທ່ານເຟສທັສ ເອີຍ, ຂ້າພະເຈົ້າບໍ່ໄດ້ເປັນບ້າ,
ແຕ່ຂ້າພະເຈົ້າເວົ້າຄວາມຈິງດ້ວຍຄວາມກ້າຫານ ແລະ ມີສະຕິ. 26 ເພາະເມື່ອກະສັດຮັບຮູ້ເຖິງສິ່ງຕ່າງໆ; ດັ່ງນັ້ນ
ຂ້າພະເຈົ້າຈຶ່ງເວົ້າກັບພຣະອົງໄດ້ຢ່າງອິດສະລະ, ເພາະຂ້າພະເຈົ້າເຊື່ອວ່າ ບໍ່ມີສິ່ງໃດທີ່ຈະຖືກເຊື່ອງຊ້ອນໄວ້ຈາກພຣະອົງ;
ເພາະສິ່ງນີ້ບໍ່ໄດ້ເຮັດໃນທີ່ລັບລີ້.
27 ກະສັດອັກກຣິປາເອີຍ, ທ່ານເຊື່ອຜູ້ທຳນວາຍນີ້ບໍ? ຂ້າພະເຈົ້າຮູ້ວ່າທ່ານເຊື່ອ." 28 ອັກກຣິປາໄດ້ກ່າວແກ່ໂປໂລວ່າ, "ໃນເວລາອັນສັ້ນໆນີ້
ເຈົ້າຈະຊັກຊວນເຮົາ ແລະ ຈະໃຫ້ເຮົາເປັນຄຣິດສະຕຽນບໍ?" 29 ໂປໂລໄດ້ເວົ້າວ່າ, "ຂ້າພະເຈົ້າອະທິຖານຫາພຣະເຈົ້າ, ບໍ່ວ່າຈະເປັນເວລາຍາວ
ຫລື ສັ້ນ, ບໍ່ແມ່ນທ່ານເທົ່ານັ້ນ, ແຕ່ຄົນທັງຫມົດຈະໄດ້ຍິນຈາກຂ້າພະເຈົ້າໃນວັນນີ້, ຈະໃຫ້ເປັນເຫມືອນຂ້າພະເຈົ້າ,
ເວັ້ນເສຍແຕ່ໂສ້ແຫ່ງການຈຳຈອງນີ້."
30 ແລ້ວກະສັດກໍລຸກຢືນຂຶ້ນ, ແລະ ຜູ້ປົກຄອງ, ແລະ ນາງເບີນີດ ແລະ ຜູ້ທີ່ກຳລັງນັ່ງກັບພວກເຂົາ; 31 ເມື່ອພວກເຂົາອອກຈາກຫ້ອງໂຖງແລ້ວ,
ພວກເຂົາໄດ້ເວົ້າກັນວ່າ " ຊາຍຜູ້ນີ້ ບໍ່ໄດ້ເຮັດສິ່ງໃດ ທີ່ສົມຄວນແກ່ຄວາມຕາຍ ຫລື ຖືກຈອງຈຳ." 32 ອັກຄຣິປາໄດ້ກ່າວແກ່ເຟສທັສວ່າ,
"ຊາຍຄົນນີ້ຄວນໄດ້ຮັບການປົດປ່ອຍ ຖ້າລາວບໍ່ໄດ້ຍື່ນອຸທອນໄປຍັງກະສັດຊີຊາ."


generated on Tue Jun 17 19:01:42 2025

27 [1]ເມື່ອຕັດສິນໃຈວ່າ ພວກເຮົາຈະເດີນເຮືອໄປຍັງປະເທດອີຕາລີ, ພວກເຂົາຈຶ່ງ ມອບໂປໂລ ແລະ ນັກໂທດຄົນອື່ນໆບາງຄົນໄວ້ກັບ
ນາຍຮ້ອຍຄົນໜຶ່ງຊື່ວ່າຢູລີໂອ ຊຶ່ງເປັນ ນາຍທະຫານໃນກອງທັບຂອງຈັກກະພັດ ໂອຄຸດໂຕ.[2]ພວກເຮົາໄດ້ລົງເຮືອລຳຫນຶ່ງ
ຈາກເມືອງອາຣະມິດ, ຊຶ່ງກຳລັງຈະອອກໄປ ທຽບທ່າຕ່າງໆຕາມຊາຍຝັ່ງຂອງແຄວັນເອເຊຍ. ດັ່ງນັ້ນພວກເຮົາກໍອອກເດີນທາງໄປທະເລ,
ອາຣິດຕາໂຂ ຈາກມືອງເທສະໂລນິກ ໃນມາເກໂດເນຍ ກໍໄປກັບພວກເຮົາດ້ວຍ.

[3]ວັນຕໍ່ມາພວກເຮົາ ໄດ້ລົງຈອດເມືອງຊີໂດນ, ທີ່ຊຶ່ງຢູລີໂອໄດ້ມີ ໃຈເມດຕາຕໍ່ໂປໂລ ແລະ ຈຶ່ງໄດ້ອະນຸຍາດໃຫ້ ໂປໂລໄປຫາຫມູ່ເພື່ອນຂອງລາວ
ເພື່ອຮັບການດູແລ.[4]ຈາກທີ່ນັ້ນ ພວກເຮົາໄດ້ໄປຍັງທະເລ ແລະ ແລ່ນເຮືອລຽບຝັ່ງຂອງເກາະໄຊປຣັດເປັນທີ່ກຳບັງລົມ,
ເພາະລົມພັດຕ້ານພວກເຮົາຢູ່.[5]ເມື່ອພວກເຮົາລ່ອງເຮືອຂ້າມທະເລ ແລະ ໃກ້ກັບຊາຍຝັ່ງເມືອງກິລິເກຍ ແລະ ເມືອງປຳຟີເລຍ,
ພວກເຮົາກໍມາເຖິງເມືອງມີຣາ, ໃນ ແຂວງລີເກຍ.[6]ໃນທີ່ນັ້ນ, ນາຍຮ້ອຍໄດ້ ພົບເຮືອລຳຫນຶ່ງ ທີ່ມາຈາກເມືອງອາເລັກຊັນເດຍ
ຊຶ່ງກຳລັງຈະໄປຍັງປະເທດອີຕາລີ. ເຂົາຈຶ່ງໃຫ້ພວກເຮົາລົງເຮືອລຳນັ້ນ.
[7]ເມື່ອພວກເຮົາແລ່ນໄປຊ້າໆ ຢູ່ຫລາຍວັນ ແລະ ໃນທີ່ສຸດກໍມາເຖິງ ເມືອງກະນີໂດຢ່າງຍາກລຳບາກ, ລົມໄດ້ພັດຕ້ານພວກເຮົາແຮງຫລາຍ.
ພວກເຮົາຈຶ່ງບໍ່ສາມາດໄປທິດທາງນັ້ນໄດ້ ດັ່ງນັ້ນພວກເຮົາຈຶ່ງ ແລ່ນລຽບຊາຍຝັ່ງດ້ານທີ່ມີກຳບັງເກາະກະເຣເຕ,
ທີ່ຢູ່ກົງກັນຂ້າມກັບເມືອງແຫລມສານໂມນ.[8]ພວກເຮົາໄດ້ແລ່ນເຮືອຮອບຊາຍຝັ່ງດ້ວຍຄວາມຍາກລຳບາກ,
ຈົນກະທັ່ງເຮົາມາເຖິງສະຖານທີ່ແຫ່ງຫນຶ່ງທີ່ຮ້ອງວ່າທ່າງາມ, ຊຶ່ງຢູ່ໃກ້ກັບເມືອງລາເຊ.
[9]ພວກເຮົາເສຍເວລາຫລາຍ, ເວລາແຫ່ງເທດສະການວັນລຶບລ້າງບາບກໍຜ່ານໄປ, ແລະຕອນນີ້ການແລ່ນເຮືອກໍເລີ່ມອັນຕະລາຍ.
ດັ່ງນັ້ນໂປໂລຈຶ່ງເຕືອນພວກເຂົາ,[10]ແລະ ໄດ້ກ່າວວ່າ, “ທ່ານທັງຫລາຍເອີຍ, ເຮົາເຫັນວ່າການເດີນທາງນີ້ຈະເປັນອັນຕະລາຍ ແລະ
ເສຍຫາຍຫລາຍ, ບໍ່ພຽງແຕ່ສິນຄ້າ ແລະ ເຮືອເທົ່ານັ້ນ, ແຕ່ລວມເຖິງຊີວິດພວກເຮົາດ້ວຍ."[11]ແຕ່ນາຍຮ້ອຍໃຫ້ຄວາມສົນໃຈກັບຫົວຫນ້າ ແລະ
ເຈົ້າຂອງເຮືອຫລາຍກວ່າຄຳແນະນຳຂອງໂປໂລ.
[12]ເພາະທ່າເຮືອນັ້ນກໍບໍ່ເລືອງງ່າຍທີ່ຈະຈອດໃນຊ່ວງລະດູຫນາວ, ຊາວເຮືອສ່ວນໃຫຍ່ຈຶ່ງແນະນຳໃຫ້ລ່ອງເຮືອຈາກທີ່ນັ້ນ
ໃຫ້ເຮົາສາມາດໄປເຖິງເມືອງຟີນິກດ້ວຍວິທີການໃດກໍໄດ້ ເພື່ອທີ່ເຮົາຈະໃຊ້ເວລາໃນຊ່ວງລະດູຫນາວທີ່ນັ້ນ.
ເມືອງຟີນິກເປັນທ່າເຮືອໃນເກາະກະເຣເຕ, ແລະ ຫັນໄປທາງທິດຕາເວັນອອກສ່ຽງເຫນືອກັບທິດຕາເວັນອອກສຽງໃຕ້.
[13]ເມື່ອລົມທິດໃຕ້ເລີ່ມພັດມາຄ່ອຍໆ, ລູກເຮືອຄິດວ່າພວກເຂົາມີສິ່ງທີ່ພວກເຂົາຕ້ອງການແລ້ວ. ດັ່ງນັ້ນພວກເຂົາຈຶ່ງຖອນສະຫມໍ ແລະ
ແລ່ນໄປຕາມເກາະກະເຣເຕໃກ້ກັບຊາຍຝັ່ງ.
[14]ແຕ່ຫລັງຈາກນັ້ນບໍ່ດົນປານໃດ ກໍມີລົມພະຍຸປັ່ນປ່ວນ, ທີ່ຊື່ວ່າລົມຕາເວັນອອກສ່ຽງເຫນືອ, ເລີ່ມຕີເຮົາຈາກຫົວເກາະ.[15]ເມື່ອເຮືອຖືກຈັບຫັນຫົວ
ແລະ ບໍ່ສາມາດຕ້ານລົມໄດ້ ເຮົາຈຶ່ງປ່ອຍໃຫ້ແລ່ນຕາມມັນໄປ.[16]ພວກເຮົາໄດ້ແລ່ນໄປທາງດ້ານທີ່ກຳບັງຂອງເກາະນ້ອຍໆ ທີ່ຮ້ອງວ່າ ກາວດາ,
ແລະ ເຮົາກໍສາມາດຮັກສາເຮືອຊູຊີບໄດ້ດ້ວຍຄວາມຍາກລຳບາກ.
[17]ເມື່ອຍົກເຮືອນ້ອຍຂຶ້ນແລ້ວ, ພວກເຂົາໃຊ້ເຊືອກຜູກເຮືອໄວ້, ພວກເຂົາຢ້ານເຮືອຈະໄປຄຸງຫາດຊາຍທີ່ແຄມຝັ່ງຂອງຊີຣະຕີ, ດັ່ງນັ້ນພວກເຂົາຈຶ່ງ
ຫ້ອນສະຫມໍລົງສູ່ທະເລ ແລະ ແລ່ນເຮືອອອກໄປ.[18]ພວກເຮົາຖືກໂຈມຕີດ້ວຍພາຍຸຢ່າງຫນັກ
ດັ່ງນັ້ນວັນຮຸ່ງຂຶ້ນລູກເຮືອເລີ່ມທີ່ຈະໂຍນສິ່ງຂອງບັນທຸກຖິ້ມລົງນ້ຳ.
[19]ໃນວັນທີສາມ ພວກເຂົາກໍໂຍນເຄື່ອງໃຊ້ໃນເຮືອຖິ້ມລົງນ້ຳດ້ວຍມືຂອງພວກເຂົາເອງ.[20]ເມື່ອດວງຕາເວັນ ແລະ
ດວງດາວບໍ່ໄດ້ສ່ອງແສງໃສ່ພວກເຮົາຫລາຍວັນ, ແລະ ລົມພະຍຸໃຫຍ່ກໍພັດມາຢ່າງແຮງຢູ່ຕະຫລອດ, ໃນທີ່ສຸດຄວາມຫວັງທີ່ພວກເຮົາ
ຈະລອດຊີວິດນັ້ນກໍຫມົດສິ້ນໄປ.
[21]ເມື່ອພວກເຂົາອອກໄປໂດຍບໍ່ມີອາຫານ, ແລ້ວໂປໂລໄດ້ຢືນທ່າມກາງລູກເຮືອ ແລະ ໄດ້ກ່າວວ່າ, "ທ່ານຄວນຟັງຂ້າພຣະເຈົ້າ, ແລະ
ບໍ່ຄວນແລ່ນເຮືອຈາກເກາະກະເຣເຕ, ຈົນຕ້ອງຮັບບາດເຈັບ ແລະ ການສູນເສຍໃນຄັ້ງນີ້.
[22]ບັດນີ້ຂ້າພຣະເຈົ້າຂໍຫນູນໃຈພວກທ່ານໃຫ້ມີຄວາມກ້າຫານ, ເພື່ອວ່າພວກທ່ານຈະບໍ່ຕ້ອງສູນເສຍຊີວິດ, ພຽງແຕ່ສູນເສຍເຮືອເທົ່ານັ້ນ.
[23]ເມື່ອຄືນທີ່ຜ່ານມາ ທູດສະຫວັນຂອງພຣະຜູ້ເປັນເຈົ້າຂອງຂ້າພຣະເຈົ້າ, ຜູ້ທີ່ຂ້າພຣະເຈົ້ານະມັດສະການ -
ທູດສະຫວັນຂອງພຣະອົງໄດ້ຢືນຢູ່ທາງຂ້າງຂ້າພຣະເຈົ້າ[24]ແລະ ໄດ້ກ່າວວ່າ, "ໂປໂລເອີຍ, ຢ່າຢ້ານເລີຍ, ທ່ານຢືນຕໍ່ຫນ້າຈັກກະພັດຊີຊາ, ແລະ
ເບິ່ງເຖີດ, ພຣະເຈົ້າປະທານຄວາມເມດຕາແກ່ທຸກຄົນທີ່ລ່ອງເຮືອກັບທ່ານ.'[25]ດັ່ງນັ້ນທ່ານທັງຫລາຍ, ຈົ່ງກ້າຫານເຖີດ
ເພາະຂ້າພະເຈົ້າວ່າງໃຈໃນພຣະເຈົ້າ ວ່າມັນຈະເກີດຂຶ້ນຢ່າງທີ່ໄດ້ບອກແກ່ຂ້າພະເຈົ້າ.[26]ແຕ່ພວກເຮົາຕ້ອງ ຄາເກາະຈຳນວນຫນຶ່ງ."
[27]ເມື່ອເຖິງຄືນທີສິບສີ່ ໃນຂະນະທີ່ເຮົາແລ່ນເຮືອດ້ວຍວິທີນີ້ ແລະ ໃນປະມານທ່ຽງຄືນທີ່ທະເລເມດີເຕຣາເນ,
ລູກເຮືອຄິດວ່າພວກເຂົາເຂົ້າໃກ້ແຜ່ນດິນແດ່ແລ້ວ[28]ພວກເຂົາໄດ້ໂຍນສາຍແທກຢັ່ງລົງນ້ຳ, ແລະ ພົບວ່ານ້ຳເລິກຫນຶ່ງຮ້ອຍຊາວຟຸດ;
ຫລັງຈາກນັ້ນບໍ່ດົນ, ພວກເຂົາກໍໂຍນສາຍລົງນ້ຳອີກ ແລະ ພົບວ່າເລິກເກົ້າສິບຟຸດ.[29]ພວກເຂົາຢ້ານວ່າພວກເຂົາອາດຈະຕຳໂງ່ນຫີນ,
ດັ່ງນັ້ນພວກເຂົາຈຶ່ງຖິ້ມສະຫມໍຈາກທ້າຍເຮືອ ແລະ ອະທິຖານໃຫ້ເຖິງຕອນເຊົ້າໄວໆ.
[30]ລູກເຮືອເບິ່ງຫາວິທີອອກຫນີຈາກເຮືອແລະ ໄດ້ຍ່ອງເຮືອຊູຊີບລົງໄປໃນທະເລ, ແລະທຳທ່າເປັນວ່າພວກເຂົາຈະໂຍນສະຫມໍຈາກຫົວເຮືອ.
[31]ແຕ່ໂປໂລກ່າວກັບນາຍຮ້ອຍແລະ ທະຫານວ່າ, "ຖ້າເຫລົ່ານີ້ບໍ່ຢູ່ໃນເຮືອ,
ທ່ານກໍບໍ່ສາມາດຮອດໄດ້"[32]ດັ່ງນັ້ນທະຫານຈຶ່ງຕັດເຊືອກຂອງເຮືອອອກ ແລະ ປ່ອຍໃຫ້ມັນລອຍໄປ.
[33]ເມື່ອເຖິງເວລາກາງເວັນ, ໂປໂລໄດ້ຂໍຮ້ອງພວກເຂົາໃຫ້ກິນອາຫານ. ເຂົາໄດ້ກ່າວວ່າ, "ມື້ນີ້ເປັນມື້ທີສິບສີ່ທີ່ທ່ານທັງຫລາຍຖ້າ ແລະ
ບໍ່ໄດ້ກິນອາຫານ; ພວກທ່ານບໍ່ໄດ້ກິນອີຫຍັງເລີຍ.[34]ດັ່ງນັ້ນຂ້າພະເຈົ້າຂໍຮ້ອງໃຫ້ທ່ານກິນອາຫານແດ່ທ້ອນ, ເພື່ອຄວາມຢູ່ລອດຂອງທ່ານ.
ເພື່ອເສັ້ນຜົມຂອງທ່ານຈະບໍ່ເສຍໄປຈັກເສັ້ນ."[35]ເມື່ອເຂົາໄດ້ກ່າວເຊັ່ນນີ້ແລ້ວ, ເຂົາກໍຈັບເຂົ້າຈີ່ ແລະ ຂອບພຣະຄຸນພຣະເຈົ້າຕໍ່ຫນ້າທຸກຄົນ.
ຈາກນັ້ນເຂົາໄດ້ຫັກເຂົ້າຈີ່ ແລະ ເລີ່ມກິນ.
[36]ຈາກນັ້ນພວກເຂົາທຸກຄົນກໍໄດ້ຮັບການຫນູນໃຈ ແລະ ພວກເຂົາກໍຮັບປະທານອາຫານ.
[37]ເຮົາທັງຫລາຍທີ່ຢູ່ໃນເຮືອນັ້ນມີສອງຮ້ອຍເຈັດສິບຫົກຄົນ.[38]ເມື່ອພວກເຂົາຮັບປະທານອີ່ມແລ້ວ,
ພວກເຂົາກໍເຮັດໃຫ້ເຮືອມີນ້ຳຫນັກເບົາຂຶ້ນໂດຍການໂຍນເຂົ້າສາລີລົງໄປໃນທະເລ.

 generated on Tue Jun 17 19:01:42 2025

39 ເມື່ອເວລາຜ່ານໄປ, ພວກເຂົາບໍ່ຮູ້ວ່າເປັນແຜ່ນດິນຫຍັງ, ແຕ່ພວກເຂົາເຫັນວ່າຕິດກັບຊາຍຫາດ, ແລະ
ພວກເຂົາຈຶ່ງປຶກສາກັນວ່າພວກເຂົາຈະສາມາດຂັບເຮືອໄປຍັງທີ່ນັ້ນໄດ້ບໍ່. 40 ດັ່ງນັ້ນ ພວກເຂົາຈຶ່ງຕັດສາຍສະໝໍຖິ້ມໄປໃນທະເລ.
ໃນເວລາດຽວກັນພວກເຂົາກໍແກ້ເຊືອກທີ່ມັດໂຫມຂັດທ້າຍເຮືອ ແລະ ຍົກໃບເຮືອຂຶ້ນເພື່ອໃຫ້ລົມພັດ; ແລະ
ດັ່ງນັ້ນພວກເຂົາຈຶ່ງມຸ່ງຫນ້າໄປຍັງຊາຍຫາດ. 41 ແຕ່ເມື່ອພວກເຂົາມາຖືງສະຖານທີ່ ທີ່ກະແສນ້ຳສອງດ້ານບັນຈົບກັນ ແລະເຮືອກໍປີ້ນໄປຄາດິນ.
ຫົວເຮືອກໍຕິດຢູ່ນັ້ນ ແລະ ບໍ່ສາມາດຍ້າຍໄດ້, ແຕ່ທ້າຍເຮືອເລີ່ມທີ່ຈະແຕກອອກເພາະຄວາມຮຸນແຮງຂອງຄື້ນ'
42 ທະຫານວາງແຜນການທີ່ຈະຂ້ານັກໂທດເພື່ອທີ່ຈະບໍ່ໃຫ້ໃຜສາມາດລອຍນ້ຳອອກໄປ ແລະຫລົບຫນີໄດ້.
43 ແຕ່ນາຍຮ້ອຍຕ້ອງການທີ່ຈະຊ່ວຍໂປໂລໃຫ້ລອດຕາຍ, ເຂົາຢຸດແຜນການຂອງພວກເຂົາ; ແລະ
ສັ່ງໃຫ້ຜູ້ທີ່ສາມາດລອຍນ້ຳທີ່ຈະກະໂດດລົງນ້ຳໄປກ່ອນ ແລະເຂົ້າໄປຝັ່ງ. 44 ຈາກນັ້ນຜູ້ທີ່ເຫລືອກໍໄດ້ເຮັດຕາມ ບາງຄົນກໍເກາະເທິງແຜ່ນກະດານ,
ບາງຄົນກໍເກາະເທິງສິ່ງຕ່າງໆ ຈາກເຮືອດ້ວຍເຫດນີ້ ເຮົາທຸກຄົນຈຶ່ງເຂົ້າຝັ່ງດ້ວຍຄວາມປອດໄພ.

28 [1]ເມື່ອພວກເຮົາໄດ້ຖືກນຳໄປຢ່າງປອດໄພ, ພວກເຮົາຮູ້ວ່າພວກເຮົາຢູ່ທີ່ເກາະມານຕາ.
[2]ຄົນພື້ນເມືອງບໍ່ພຽງໃຫ້ຄວາມເມດຕາແກ່ພວກເຮົາເທົ່ານັ້ນ, ແຕ່ພວກເຂົາຍັງກໍ່ກອງໄຟ ແລະໃຫ້ການຕ້ອນຮັບພວກເຮົາທຸກຄົນ,
ເພາະຝົນຕົກຢ່າງຕໍ່ເນື່ອງ ແລະ ຫນາວເຢັນ.

[3]ແຕ່ເມື່ອໂປໂລໄດ້ຮວບຮວມກິ່ງໄມ້ໄດ້ກອງຫນຶ່ງ ແລະ ວາງໄວ້ໃສ່ກອງໄຟ, ມີງູໂຕຫນຶ່ງອອກມາເພາະຄວາມຮ້ອນ, ແລະ ຮັດມືຂອງລາວ.
[4]ເມື່ອຄົນພື້ນເມືອງໄດ້ເຫັນສັດຂົບມືຂອງລາວ, ພວກເຂົາກ່າວຕໍ່ກັນວ່າ, "ຊາຍຄົນນີ້ເປັນຄົນຂ້າຄົນແນ່ນອນ ທີ່ໄດ້ລອດຊີວິດຈາກທະເລ,
ຄວາມຍຸຕິທຳກໍຍັງບໍ່ອະນຸຍາດໃຫ້ເຂົາມີຊີວິດຢູ່."
[5]ແຕ່ເມື່ອເຂົາໄດ້ສະບັດສັດນັ້ນເຂົ້າໄປໃນກອງໄຟ ແລະ ບໍ່ໄດ້ຮັບອັນຕະລາຍໃດໆ.[6]ພວກເຂົາກໍຖ້າເບິ່ງວ່າເຂົາຈະມີການອັກເສບເປັນໄຂ້ ຫລື
ລົ້ມລົງຕາຍຢ່າງກະທັນຫັນ. ແຕ່ຫລັງຈາກທີ່ພວກເຂົາຖ້າເບິ່ງເປັນເວລາດົນນານແລະ
ໄດ້ເຫັນວ່າບໍ່ມີຫຍັງເປັນເລື່ອງຜິດປົກກະຕິເກີດຂຶ້ນກັບເຂົາ, ພວກເຂົາຈຶ່ງປ່ຽນໃຈ ແລະ ໄດ້ກ່າວເຂົາເປັນພຣະເຈົ້າ.
[7]ບໍລິເວນໃກ້ຄຽງນັ້ນມີດິນແດນທີ່ເປັນຂອງຄົນທີ່ເປັນຫົວຫນ້າຊື່ປູບລີອັສ. ເຂົາໃຫ້ຕ້ອນຮັບເຮົາແລະ
ໄດ້ຈັດຕຽມສຳລັບເຮົາດ້ວຍຄວາມກະລຸນາເປັນເວລາສາມວັນ.[8]ຕໍ່ມາບິດາຂອງປູບລີອັສໄດ້ລົ້ມປ່ວຍດ້ວຍໄຂ້ ແລະທ້ອງບິດ. ເມື່ອໂປໂລໄປຫາເຂົາ,
ໂປໂລໄດ້ອະທິຖານ, ວາງມືໃສ່ເຂົາ, ແລະ ໄດ້ຮັກສາເຂົາໃຫ້ຫາຍ.[9]ຫລັງຈາກເລື່ອງນີ້ເກີດຂຶ້ນ ຄົນອື່ນໆ ທີ່ຢູ່ບົນເກາະທີ່ເຈັບປ່ວຍກໍໄດ້ມາຫາ
ແລະໄດ້ຮັບການຮັກສາປິ່ນປົວ.[10]ຜູ້ຄົນຍັງໃຫ້ກຽດພວກເຮົາຫລາຍເມື່ອເຮົາກຳລັງຕຽມທີ່ຈະແລ່ນເຮືອ.
ເມື່ອພວກເຂົາໄດ້ໃຫ້ສິ່ງຂອງທີ່ພວກເຮົາຕ້ອງການ.
[11]ຫລັງຈາກສາມເດືອນ ພວກເຮົາລົງເຮືອອາເລັກຊັນເດຍ ໃຊ້ເວລາຢູ່ເທິງເກາະໃນລະດູຫນາວ, ມີຮູບສະລັກທີ່ເທິງຫົວເຮືອນັ້ນເປັນຮູບຂອງ
"ສອງອ້າຍນ້ອງຝາແຝດ".[12]ຫລັງຈາກທີ່ເຮົາຫລົງຈອດເມືອງຊີຣາກູ, ເຮົາຢູ່ທີ່ນັ້ນເປັນເວລາສາມວັນ.
[13]ຈາກທີ່ນັ້ນ ພວກເຮົາແລ່ນເຮືອມາເຖິງເຣຄີໂອນ. ຫລັງຈາກນັ້ນຫນຶ່ງວັນກໍມີລົມໃຕ້ພັດມາ, ແລະ ໃນສອງວັນ
ພວກເຮົາກໍມາເຖິງເມືອງໂປຕີໂອລີ.[14]ທີ່ນັ້ນເຮົາໄດ້ພົບກັບພີ່ນ້ອງບາງຄົນແລະ ໄດ້ຖືກເຊີນໃຫ້ໄປພັກກັບພວກເຂົາເປັນເວລາເຈັດວັນ.
ດັ່ງນັ້ນເຮົາຈຶ່ງມາເຖິງກຸງໂຣມ.[15]ພີ່ນ້ອງທີ່ຢູ່ທີ່ນັ້ນ, ຫລັງຈາກທີ່ພວກເຂົາໄດ້ຍິນກ່ຽວກັບເຮົາ, ກໍໄດ້ມາພົບກັບເຮົາທີ່ຕະຫລາດອາປີໂອ ແລະ
ທີ່ບ້ານສາມຮ້ານ ເມື່ອເປາໂລໄດ້ພົບພີ່ນ້ອງແລ້ວ, ເຂົາຂອບໃຈພຣະເຈົ້າ ແລະໄດ້ຮັບກຳລັງໃຈ.
[16]ເມື່ອເຮົາເຂົ້າໄປໃນກຸງໂຣມ, ໂປໂລໄດ້ຮັບອະນຸຍາດໃຫ້ຢູ່ຄົນດຽວກັບທະຫານທີ່ຄຸມເຂົາໄວ້.[17]ຫລັງຈາກນັ້ນສາມວັນ
ໂປໂລຖືກຮ້ອງພ້ອມກັບຄົນເຫລົ່ານັ້ນທີ່ເຄີຍເປັນຜູ້ນຳໃນຫມູ່ຊາວຢິວ. ເມື່ອພວກເຂົາມາຮ່ວມກັນແລ້ວ ໂປໂລກ່າວກັບພວກເຂົາວ່າ,
"ພີ່ນ້ອງທີ່ຮັກ, ເຖິງແມ້ວ່າຂ້າພຣະເຈົ້າບໍ່ໄດ້ເຮັດຫຍັງຜິດຕໍ່ຜູ້ຄົນ ຫລືປະເພນີຂອງບັນພະບຸລຸດຂອງເຮົາ,
ຂ້າພະເຈົ້າໄດ້ຖືກສົ່ງໃຫ້ເປັນນັກໂທດຈາກກຸງເຢຣູຊາເລັມໄປຢູ່ໃນເມືອງຂອງຊາວໂຣມ.[18]ຫລັງຈາກທີ່ພວກເຂົາໄຕ່ສວນຂ້າພະເຈົ້າແລ້ວ,
ພວກເຂົາປາດຖະຫນາໃຫ້ຂ້າພະເຈົ້າເປັນອິດສະລະ ເພາະບໍ່ມີເຫດຜົນໃດໃນຕົວຂ້າພະເຈົ້າ ຖືກຕໍ່ການລົງໂທດເຖິງຕາຍ.
[19]ແຕ່ເມື່ອພວກຢິວເວົ້າຄັດຄ້ານຄວາມປາດຖະຫນາຂອງພວກເຂົາ, ຂ້າພະເຈົ້າຖືກບັງຄັບໃຫຂໍອຸທອນໄປຍັງຈັກກະພັດຊີຊາ,
ເຖິງແມ້ບໍ່ແມ່ນຂໍ້ກ່າວຫາໃດທີ່ຂ້າພະເຈົ້ານຳມາຕໍ່ຕ້ານຊົນຊາດຂອງຂ້າພະເຈົ້າ.[20]ເຫດເພາະການອຸທອນຂອງຂ້າພະເຈົ້າ,
ຂ້າພະເຈົ້າຮ້ອງຂໍທີ່ຈະພົບກັບທ່ານ ແລະ ໄດ້ເວົ້າກັບທ່ານ ນີ້ເປັນເພາະສິ່ງທີ່ອິດສາຣາເອນມີຄວາມຫມັ້ນໃຈຈົນຂ້າພະເຈົ້າຖືກລາມດ້ວຍໂສ້ນີ້."
[21]ແລ້ວພວກເຂົາກໍເວົ້າກັບເພິ່ນວ່າ, "ເຮົາບໍ່ໄດ້ຮັບຈົດຫມາຍຈາກແຂວງຢູດາຍ ກ່ຽວກັບທ່ານ, ຫລືພີ່ນ້ອງຄົນໃດມາລາຍງານ ຫລື
ເວົ້າຫຍັງບໍ່ດີກ່ຽວກັບທ່ານ.[22]ແຕ່ເຮົາຕ້ອງການຈະໄດ້ຍິນຈາກສິ່ງທີ່ທ່ານຄິດກ່ຽວກັບນິກາຍນີ້, ເພາະເຮົາຮູ້ວ່າສິ່ງນີ້ຖືກເວົ້າຕໍ່ຕ້ານໃນທຸກແຫ່ງ."
[23]ເມື່ອພວກເຂົາໄດ້ຈັດວັນຫນຶ່ງໃຫ້ເຂົາ, ແລ້ວຜູ້ຄົນຫລາຍໄດ້ມາຫາຍັງທີ່ຢູ່ອາໃສຂອງລາວ. ລາວໄດ້ນຳສະເຫນີເລື່ອງນີ້ແກ່ພວກເຂົາ, ແລະ
ໄດ້ເປັນພະຍານກ່ຽວກັບອານາຈັກຂອງພຣະເຈົ້າ. ລາວໄດ້ພະຍາຍາມທີ່ຈະຊັກຊວນໃຫ້ພວກເຂົາກ່ຽວກັບພຣະເຢຊູເຈົ້າ,
ທັງຈາກກົດຫມາຍຂອງໂມເຊ ແລະ ຈາດຜູ້ທຳນວຍຕັ້ງແຕ່ເຊົ້າຈົນເຖິງເວລາຕອນແລງ.[24]ບາງຄົນໄດ້ເຊື່ອສິ່ງທີ່ຖືກກ່າວ,
ໃນຂະນະທີ່ຄົນອື່ນໆບໍ່ເຊື່ອ.
[25]ເມື່ອພວກເຂົາບໍ່ເຫັນດ້ວຍກັບຄົນອື່ນໆ, ພວກເຂົາກໍໄດ້ລາຈາກໄປຫລັງຈາກ ໂປໂລໄດ້ກ່າວຄຳຫນຶ່ງວ່າ, "ພຣະວິນຍານບໍຣິສຸດ
ໄດ້ຊົງກ່າວວ່າຜ່ານເອຊາຢາຜູ້ທຳນວຍຕໍ່ບັນພະບຸລຸດຂອງທ່ານ.[26]ພຣະອົງກ່າວວ່າ 'ຈົ່ງໄປຫາຄົນເຫລົ່ານີ້ ແລະ ເວົ້າວ່າ, "ພວກເຈົ້າຈະໄດ້ຍິນ,
ແຕ່ບໍ່ເຂົ້າໃຈ; ແລະ ເຫັນສິ່ງທີ່ເຈົ້າຈະເຫັນແຕ່ບໍ່ຮັບຮູ້.
[27]ເພາະຫົວໃຈຂອງຄົນນີ້ໄດ້ເຢັນຊາ, ແລະ ດ້ວຍຫູຂອງພວກເຂົາກໍຍາກທີ່ຈະໄດ້ຍິນ, ແລະ ພວກເຂົາໄດ້ປິດຕາຂອງພວກເຂົາຢູ່.
ບໍ່ດັ່ງນັ້ນພວກເຂົາອາດຈະໄດ້ເຫັນດ້ວຍຕາຂອງພວກເຂົາ, ແລະ ໄດ້ຍິນດ້ວຍຫູຂອງພວກເຂົາ, ແລະ ເຂົ້າໃຈດ້ວຍຫົວໃຈຂອງພວກເຂົາ ແລະ
ຫັນກັບມາອີກຄັ້ງ, ແລະເຮົາຈະຮັກສາພວກເຂົາ."'
[28]ດັ່ງນັ້ນ, ທ່ານຄວນຈະຮູ້ຄວາມລອດຂອງພຣະເຈົ້ານີ້ຖືກສົ່ງໄປຍັງຕ່າງຊາດ, ແລະ ພວກເຂົາຈະຟັງ."[29]
[30]ໂປໂລອາໄສຢູ່ໃນບ້ານທີ່ເຂົາເຊົ່າເປັນເວລາສອງປີ, ແລະ ເຂົາໄດ້ໃຫ້ການຕ້ອນຮັບທຸກຄົນທີ່ມາຫາເຂົາ.
[31]ເຂົາໄດ້ເທດສະຫນາເຖິງອານາຈັກຂອງພຣະເຈົ້າ ແລະ ໄດ້ສອນສິ່ງຕ່າງໆກ່ຽວກັບອົງພຣະເຢຊູຄຣິດເຈົ້າດ້ວຍຄວາມກ້າຫານ.
ບໍ່ມີໃຜຢຸດເຂົາໄດ້.

# ໂຣມ

## 1

[1]ໂປໂລ, ຜູ້ຮັບໃຊ້ຂອງພຣະເຢຊູຄຣິດເຈົ້າ, ທີ່ໄດ້ຮັບການຊົງເອີ້ນໃຫ້ເປັນອັກຄະສາວົກ, ແລະ ຕັ້ງໄວ້ໃຫ້ປະກາດຂ່າວປະເສີດຂອງພຣະເຈົ້າ.
[2]ນີ້ເປັນຂ່າວປະເສີດທີ່ພຣະອົງໄດ້ຊົງສັນຍາໄວ້ລ່ວງຫນ້າໂດຍຜ່ານຜູ້ປະກາດພຣະຄັມຂອງພຣະອົງໃນພຣະຄັມພີສັກສິດ.
[3]ຂ່າວປະເສີດນັ້ນກ່ຽວກັບພຣະບຸດຂອງພຣະອົງ, ຜູ້ທີ່ໄດ້ຊົງບັງເກີດມາຈາກເຊື້ອສາຍຂອງດາວິດໂດຍທາງເນື້ອຫນັງ.

4ໂດຍການເປັນຄືນຂຶ້ນມາຈາກຄວາມຕາຍນັ້ນ,
ພຣະອົງໄດ້ຮັບການປະກາດໃຫ້ເປັນພຣະບຸດຂອງພຣະເຈົ້າຜູ້ຊົງຣິດໂດຍພຣະວິນຍານແຫ່ງຄວາມບໍຣິສຸດ -
ຄືພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າຂອງເຮົາ. 5ໂດຍທາງພຣະອົງນັ້ນ ພວກເຮົາຈະໄດ້ຮັບພຣະຄຸນ ແລະ ການເຮັດຫນ້າທີ່ເປັນອັກຄະສາວົກ
ເພື່ອໄປປະກາດໃຫ້ຄົນທຸກຊາດເຊື່ອຟັງຕາມຄວາມເຊື່ອນັ້ນໃນທົ່ວທຸກຊາດ, ເພື່ອເຫັນແກ່ພຣະນາມຂອງພຣະອົງ. 6ໃນບັນດາຊົນຊາດເຫລົ່ານີ້,
ທ່ານກໍໄດ້ຮັບການຊົງເອີ້ນໃຫ້ເປັນຄົນຂອງພຣະເຢຊູຄຣິດເຈົ້າດ້ວຍ.
7ຈົດຫມາຍສະບັບນີ້ເຖິງທຸກທ່ານທີ່ຢູ່ໃນນະຄອນໂຣມ, ຜູ້ທີ່ພຣະເຈົ້າຊົງຮັກ, ແລະ ຊົງເອີ້ນໃຫ້ເປັນໄພ່ພົນ. ຂໍພຣະຄຸນ ແລະ
ສັນຕິສຸກຊຶ່ງມາຈາກພຣະເຈົ້າພຣະບິດາຂອງພວກເຮົາທັງຫລາຍ, ແລະ ຈາກພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າ
ຈົ່ງດຳຣົງຢູ່ກັບພວກທ່ານທັງຫລາຍເຖີດ.
8ກ່ອນອື່ນ, ຂ້າພຣະເຈົ້າຂໍຂອບພຣະຄຸນພຣະເຈົ້າຂອງຂ້າພຣະເຈົ້າສຳຫລັບພວກທ່ານທຸກຄົນໂດຍທາງພຣະເຢຊູຄຣິດເຈົ້າ,
ເພາະຄວາມເຊື່ອຂອງທ່ານເປັນທີ່ຮູ້ຈັກກັນໄປທົ່ວໂລກ. 9ເພາະພຣະເຈົ້າຊົງເປັນພະຍານຂອງຂ້າພຣະເຈົ້າວ່າ,
ຜູ້ທີ່ຂ້າພຣະເຈົ້າໄດ້ຮັບໃຊ້ດ້ວຍວິນຍານຂອງຂ້າພຣະເຈົ້າ ໃນການປະກາດເລື່ອງຂ່າວປະເສີດຂອງພຣະບຸດນັ້ນ,
ຂ້າພຣະເຈົ້າຈະກ່າວເຖິງພວກທ່ານຢ່າງຕໍ່ເນື່ອງ. 10ຂ້າພຣະເຈົ້າທູນຂໍໃນຄຳອະທິຖານຂອງຂ້າພຣະເຈົ້າສະເຫມີວ່າ
ຫາກເປັນຄວາມປະສົງຂອງພຣະເຈົ້າແລ້ວ ໃນທີ່ສຸດຂ້າພຣະເຈົ້າຈະໄດ້ມາຫາທ່ານຕອນນີ້ໂດຍວິທີໃດວິທີຫນຶ່ງ.
11ເພາະວ່າຂ້າພຣະເຈົ້າປາຖນາຈະພົບທ່ານ, ເພື່ອຈະນຳຂອງປຣະທານຝ່າຍວິນຍານມາໃຫ້ແກ່ທ່ານ, ເພື່ອທີ່ຈະເສີມກຳລັງທ່ານ. 12ນັ້ນຄື,
ຂ້າພຣະເຈົ້າປາຖນາທີ່ຈະໄດ້ຮັບການຫນູນໃຈຊຶ່ງກັນແລະກັນໃນບັນດາພວກທ່ານ, ຜ່ານທາງຄວາມເຊື່ອຂອງແຕ່ລະຄົນຄືຄວາມເຊື່ອຂອງ, ທ່ານ
ແລະ ຂອງຂ້າພຣະເຈົ້າ.
13ອ້າຍນ້ອງທັງຫລາຍ, ບັດນີ້ຂ້າພຣະເຈົ້າບໍ່ຢາກໃຫ້ທ່ານທີ່ຈະບໍ່ຮັບຮູ້ວ່າ, ຂ້າພຣະເຈົ້າຕັ້ງໃຈຈະມາຫາທ່ານຫລາຍເທື່ອ,
(ແຕ່ຈົນເຖິງປະຈຸບັນນີ້ກໍຍັງມີອຸປະສັກຢູ່), ຂ້າພຣະເຈົ້າຕ້ອງການຈະເຮັດຢ່າງນີ້ເພື່ອທີ່ຈະມີການເກັບກ່ຽວ ໃນທ່າມກາງພວກທ່ານ,
ເຊັ່ນດຽວກັບຊົນຊາດອື່ນໆ. 14ຂ້າພຣະເຈົ້າເປັນຫນີ້ທັງຊາວກຣີກ ແລະ ຄົນຕ່າງຊາດ, ເປັນຫນີ້ທັງພວກນັກປຣາດທີ່ສະຫລາດ ແລະ ຄົນໂງ່ດ້ວຍ.
15ດັ່ງນັ້ນ, ສຳລັບຂ້າພຣະເຈົ້າແລ້ວ, ຂ້າພຣະເຈົ້າພ້ອມທີ່ຈະປະກາດຂ່າວປະເສີດແກ່ທ່ານທີ່ຢູ່ໃນນະຄອນ ໂຣມດ້ວຍ.
16ເພາະຂ້າພຣະເຈົ້າບໍ່ລະອາຍໃນຂ່າວປະເສີດ, ເພາະວ່າຂ່າວປະເສີດນັ້ນເປັນຣິດທານຸພາບຂອງພຣະເຈົ້າ
ເພື່ອໃຫ້ທຸກຄົນທີ່ເຊື່ອຈະໄດ້ຮັບຄວາມພົ້ນ, ສຳລັບພວກຊາວຢິວກ່ອນ ແລະ ສຳລັບພວກກຣີກນຳອີກ. 17ເພາະວ່າໃນຂ່າວປະເສີດນັ້ນ
ຄວາມຊອບທັມຂອງພຣະເຈົ້າກໍໄດ້ເປີດເຜີຍອອກມາໂດຍເລີ່ມຕົ້ນຈາກຄວາມເຊື່ອສູ່ຄວາມເຊື່ອ, ດັ່ງທີ່ມີຂຽນໄວ້ວ່າ, "ຄົນຊອບທັມຈະດຳ
ຣົງຊີວິດຢູ່ໂດຍຄວາມເຊື່ອ."
18ເພາະວ່າພຣະເຈົ້າຊົງສຳແດງຄວາມໂກດຮ້າຍຂອງພຣະອົງຈາກສະຫວັນ ຕໍ່ຄວາມອະຍຸຕິທັມ ແລະ ຄວາມບໍ່ຊອບທັມທັງມວນຂອງມະນຸດ,
ທີ່ເອົາຄວາມບໍ່ຊອບທັມມາຂັດຂວາງຄວາມຈິງ. 19ນີ້ເປັນເພາະວ່າການທີ່ຈະຮູ້ຈັກວ່າ ພຣະເຈົ້າໄດ້ຈະແຈ້ງກັບພວກເຂົາທັງຫລາຍ.
ເພາະວ່າພຣະເຈົ້າໄດ້ຊົງສຳແດງແກ່ເຂົາແລ້ວ.
20ເພາະວ່າສະພາບຂອງພຣະເຈົ້າທີ່ບໍ່ປາກົດໃຫ້ເຫັນນັ້ນ, ກໍໄດ້ປາກົດແຈ້ງຂຶ້ນ, ຕັ້ງແຕ່ທີ່ຊົງສ້າງໂລກ, ໃນສິ່ງເຫລົ່ານັ້ນ
ເປັນທີ່ເຂົ້າໃຈໄດ້ຜ່ານທາງສັບພະສິ່ງທີ່ຊົງສ້າງຂຶ້ນ. ດັ່ງນັ້ນ ພວກເຂົາຈຶ່ງບໍ່ມີຂໍ້ແກ້ຕົວຫຍັງເລີຍ. 21ນີ້ເປັນເພາະວ່າ,
ເຖິງແມ່ນວ່າພວກເຂົາໄດ້ຮູ້ຈັກພຣະເຈົ້າແລ້ວ, ພວກເຂົາກໍບໍ່ໄດ້ຖວາຍກຽດແດ່ພຣະເຈົ້າໃຫ້ສົມກັບທີ່ຊົງເປັນພຣະເຈົ້າ, ແລະ
ພວກເຂົາກໍບໍ່ໄດ້ຂອບພຣະຄຸນພຣະອົງ. ແຕ່ພວກເຂົາກັບຄິດແບບໂງ່ ໆ ໃນສິ່ງທີ່ບໍ່ມີປະໂຫຍດ ແລະ ຈິດໃຈອັນໂງ່ຈ້າຂອງພວກເຂົາກໍມືດລົງ.
22ພວກເຂົາໄດ້ອ້າງຕົວວ່າມີປັນຍາສະຫລາດ, ແຕ່ພວກເຂົາໄດ້ກາຍເປັນຄົນໂງ່ຈ້າໄປ.
23ພວກເຂົາໄດ້ເອົາສະຫງ່າຣາສີຂອງພຣະເຈົ້າຜູ້ເປັນອຳມະຕະມາແລກປ່ຽນ ກັບຮູບພາບແກະສະຫລັກຂອງມະນຸດທີ່ຕ້ອງຕາຍ, ຫລື ຮູບນົກ,
ຮູບສັດເດັຽຣະສານສີ່ຕີນ, ແລະ ຮູບສັດເລືອຄານ.
24ເຫດສະນັ້ນ ພຣະເຈົ້າຈຶ່ງຊົງປ່ອຍພວກເຂົາໃຫ້ປະພຶດການຊົ່ວຊ້າຕາມຣາຄະຕັນຫາໃນໃຈຂອງພວກເຂົາ,
ໃຫ້ພວກເຂົາເຮັດສິ່ງທີ່ຫນ້າອັບອາຍຕໍ່ຮ່າງກາຍຂອງກັນ ແລະ ກັນ. 25ເພາະວ່າພວກເຂົາເອົາຄວາມຈິງຂອງພຣະເຈົ້າມາປ່ຽນກັບຄວາມຕົວະ,
ແລະ ຍັງທັງນະມັດສະການແລະ ບົວຣະບັດສິ່ງທີ່ສ້າງຂຶ້ນມາແທນອົງພຣະຜູ້ສ້າງ,
ຜູ້ຊຶ່ງສົມຄວນທີ່ຈະໄດ້ຮັບຄຳສັນຣະເສີນຕະຫລອດໄປເປັນນິດ. ອາເມນ.
26ເພາະເຫດນີ້, ພຣະເຈົ້າຈຶ່ງໄດ້ຊົງປ່ອຍໃຫ້ເຂົາມີກິເລດຕັນຫາອັນຫນ້າອັບອາຍ,
ສຳລັບພວກຜູ້ຍິງກໍປ່ຽນຈາກຄວາມສຳພັນຕາມທັມະຊາດໃຫ້ເປັນຜິດທັມະຊາດ. 27ເຊັ່ນດຽວກັນ,
ຜູ້ຊາຍກໍເລີກມີເພດສຳພັນກັບຜູ້ຍິງຕາມທັມະຊາດ. ແລະ ເຜົາຜານໄປດ້ວຍໄຟກິເລດຕັນຫາຕໍ່ກັນ ແລະ ກັນ.
ພວກນີ້ຄືຜູ້ຊາຍທີ່ປະກອບກິດຕໍ່ຜູ້ຊາຍດ້ວຍກັນອັນເປັນສິ່ງທີ່ຫນ້າອັບອາຍ ແລະ
ພວກເຂົາຈຶ່ງໄດ້ຮັບການລົງໂທດອັນເນື່ອງມາຈາກຄວາມບິດເບືອນຂອງພວກເຂົາ.
28ເພາະພວກເຂົາບໍ່ເຫັນດີທີ່ຈະຮູ້ຈັກພຣະເຈົ້າ ພຣະອົງຈຶ່ງຊົງປ່ອຍໃຫ້ພວກເຂົາມີຈິດໃຈຊົ່ວຮ້າຍ, ສຳລັບພວກເຂົາ
ທີ່ຈະປະພຶດສິ່ງເຫລົ່ານັ້ນທີ່ບໍ່ເຫມາະສົມ.
29ພວກເຂົາເຕັມໄປດ້ວຍຄວາມບໍ່ຊອບທັມທັງຫມົດ, ຄວາມຊົ່ວຮ້າຍ, ຄວາມໂລບມາກໂລພາ, ແລະ ຄວາມປອງຮ້າຍ.
ພວກເຂົາເຕັມໄປດ້ວຍຄວາມອິດສາ, ການຄາດຕະກຳ, ການຜິດຖຽງກັນ, ການຫລອກລວງ, ແລະ ການຄິດພະຍາບາດ.
30ພວກເຂົາເປັນພວກຊຸບຊິບນິນທາ, ໃສ່ຮ້າຍປ້າຍສີກັນ, ແລະ ກຽດຊັງພຣະເຈົ້າ. ພວກເຂົາມັກໃຊ້ຄວາມຮຸນແຮງ, ຈອງຫອງ ແລະ ໂອ້ອວດ,
ພວກເຂົາເຮັດຄວາມຊົ່ວໃຫມ່ໆ, ແລະ ພວກເຂົາກໍບໍ່ເຊື່ອຟັງບິດາມານດາ. 31ພວກເຂົາຂາດຄວາມເຂົ້າໃຈ; ພວກເຂົາຂາດຄວາມຊື່ສັດ,
ປາສະຈາກຄວາມຮັກຕໍ່ກັນ, ແລະ ບໍ່ມີຄວາມເມດຕາ.
32ພວກເຂົາຮູ້ກົດບັນຍັດຂອງພຣະເຈົ້າ, ທີ່ວ່າຄົນທຸກຄົນທັງປວງທີ່ປະພຶດເຊັ່ນນັ້ນສົມຄວນໄດ້ຮັບຄວາມຕາຍ.
ແຕ່ພວກເຂົາບໍ່ພຽງແຕ່ປະພຶດສິ່ງເຫລົ່ານີ້ເທົ່ານັ້ນ, ແຕ່ຍັງເຫັນດີກັບຄົນອື່ນທີ່ປະພຶດເຊັ່ນນັ້ນດ້ວຍ.

2 [1]ເຫດສະນັ້ນ ທ່ານບໍ່ມີຂໍ້ແກ້ຕົວເລີຍ, ທ່ານເອີຍ, ເມື່ອທ່ານຕັດສິນຄົນອື່ນນັ້ນ,
ເພາະເມື່ອທ່ານກ່າວໂທດຄົນອື່ນທ່ານກໍໄດ້ກ່າວໂທດຕົນເອງດ້ວຍ. ເພາະວ່າທ່ານທີ່ກ່າວໂທດ ກໍຍັງປະພຶດແບບດຽວກັນ.
[2]ແຕ່ພວກເຮົາຮູ້ວ່າການພິພາກສາຂອງພຣະເຈົ້ານັ້ນກໍເປັນໄປຕາມຄວາມຈິງ ເມື່ອການພິພາກສານັ້ນມາຮອດຄົນທີ່ປະພຶດຕົວເຊັ່ນນັ້ນ.

[3]ແຕ່ພິຈາຣະນາສິ່ງນີ້, ທ່ານເອີຍ, ທ່ານທີ່ຕັດສິນຄົນທີ່ປະພຶດຕົນເຊັ່ນນັ້ນ ເຖິງແມ່ນວ່າທ່ານເອງກໍຍັງປະພຶດຕົວແບບດຽວກັນ.
ທ່ານຄິດວ່າຈະລອດພົ້ນຈາກການພິພາກສາຂອງພຣະເຈົ້າໄດ້ບໍ?[4]ຫລືວ່າທ່ານປະຫມາດພຣະກາຣຸນາອັນບໍຣິບູນ,
ການຊະລໍໃນການລົງໂທດຂອງພຣະອົງ, ແລະ ຄວາມອົດທົນພຣະທັຍຂອງພຣະອົງ?
ທ່ານບໍ່ຮູ້ບໍວ່າພຣະເມດຕາຄຸນຂອງພຣະເຈົ້ານັ້ນກໍເພື່ອທີ່ຈະນຳພາທ່ານໃຫ້ກັບໃຈໃຫມ່?
[5]ແຕ່ຖ້າທ່ານໃຈແຂງກະດ້າງ ແລະ ບໍ່ຍອມກັບໃຈຫລາຍເທົ່າໃດ ທ່ານກໍໄດ້ສະສົມຄວາມໂກດຮ້າຍໃຫ້ຕົວເອງເທົ່ານັ້ນ,
ໃນວັນແຫ່ງຄວາມໂກດຮ້າຍ, ນັ້ນຄື, ວັນທີ່ພຣະອົງຈະຊົງສຳແດງການພິພາກສາລົງໂທດອັນທ່ຽງທັມໃຫ້ເປັນທີ່ປາກົດແຈ້ງ.
[6]ພຣະອົງຈະປຣະທານແກ່ທຸກຄົນຕາມທີ່ເຫມາະສົມກັບການກະທຳຂອງເຂົາ:[7]ສຳຫລັບຄົນທີ່ເຮັດຄວາມດີ, ຢ່າງສະເຫມີຕົ້ນສະເຫມີປາຍ,
ສະແຫວງຫາຄຳສັນຣະເສີນ, ກຽດຕິຍົດ, ແລະ ຄວາມເປັນອຳມະຕະນັ້ນ, ພຣະອົງຈະປຣະທານຊີວິດນິຣັນດອນໃຫ້.
[8]ແຕ່ສຳລັບຄົນທີ່ມັກຍົກຕົນຂົ່ມຫມູ່, ຄົນທີ່ບໍ່ເຊື່ອຟັງຄວາມຈິງ ແຕ່ເຊື່ອຟັງຄວາມອະທັມ, ຄວາມໂກດຮ້າຍ ແລະ
ການລົງໂທດຢ່າງຮຸນແຮງກໍຈະມາເຖິງ.[9]ພຣະເຈົ້າຈະຊົງເຮັດໃຫ້ເກີດທຸກທໍຣະມານ ແລະ ຄວາມທຸກຍາກລຳບາກແກ່ທຸກຄົນທີ່ປະພຶດຕົວຊົ່ວຊ້າ,
ແກ່ພວກຊາວຢິວກ່ອນ, ແລະ ພວກຊາວກຣີກດ້ວຍ.
[10]ແຕ່ຄຳສັນລະເສີນ, ກຽດຕິຍົດ, ແລະ ສັນຕິສຸກຈະເກີດແກ່ທຸກຄົນທີ່ປະພຶດຕົວດີ, ແກ່ພວກຊາວຢິວກ່ອນ, ແລະ ພວກຊາວກຣີກດ້ວຍ.
[11]ເພາະວ່າພຣະເຈົ້າບໍ່ໄດ້ຊົງເຫັນແກ່ຜູ້ໃດເລີຍ.[12]ເພາະວ່າຄົນທັງຫລາຍທີ່ໄດ້ເຮັດຜິດບາບໂດຍປາສະຈາກກົດບັນຍັດ,
ກໍຈະຈິບຫາຍໂດຍປາສະຈາກກົດບັນຍັດ ແລະ ຄົນທັງຫລາຍທີ່ໄດ້ເຮັດບາບໂດຍມີດ້ວຍກົດບັນຍັດກໍຈະຖືກພິພາກສາຕາມກົດບັນຍັດ.
[13]ເພາະວ່າຄົນທີ່ພຽງແຕ່ຟັງກົດບັນຍັດເທົ່ານັ້ນ ບໍ່ແມ່ນຜູ້ຊອບທັມຕໍ່ພຣະພັກພຣະເຈົ້າ, ແຕ່ຄົນທີ່ປະຕິບັດຕາມກົດບັນຍັດ
ພຣະເຈົ້າກໍຊົງຖືວ່າເປັນຜູ້ຊອບທັມ.[14]ເພາະວ່າເມື່ອຄົນຕ່າງຊາດ, ຊຶ່ງບໍ່ມີກົດບັນຍັດ, ໄດ້ປະພຶດຕາມກົດບັນຍັດໂດຍນິສັຍປົກກະຕິ,
ພວກເຂົາກໍເປັນກົດບັນຍັດໃຫ້ໂຕເອງ, ເຖິງແມ່ນວ່າພວກເຂົາບໍ່ມີກົດບັນຍັດກໍຕາມ.
[15]ໂດຍສິ່ງນີ້ເອງ ພວກເຂົາສະແດງໃຫ້ເຫັນວ່າ ຫລັກຄວາມປະພຶດທີ່ຣະບຸໄວ້ໃນກົດບັນຍັດນັ້ນ ມີຈາຣຶກຢູ່ໃນຫົວໃຈຂອງພວກເຂົາ.
ໃຈສຳນຶກຜິດຊອບຂອງພວກເຂົາຍັງເປັນພະຍານໃຫ້ແກ່ພວກເຂົາດ້ວຍ,
ແລະຄວາມຄິດຂອງພວກເຂົາເອງນັ້ນແຫລະຈະກ່າວໂທດຕົວເອງຫລືແກ້ຕົວໃຫ້ແກ່ພວກເຂົາ[16]ແລະໃຫ້ແກ່ພຣະເຈົ້ານຳອີກ.
ສິ່ງນັ້ນຈະເກີດຂຶ້ນໃນວັນທີ່ພຣະເຈົ້າຈະຊົງພິພາກສາຄວາມລັບຂອງມະນຸດທຸກຄົນ, ຕາມຂ່າວປະເສີດທີ່ຂ້າພະເຈົ້າໄດ້ປະກາດນັ້ນ,
ໂດຍທາງພຣະເຢຊູຄຣິດເຈົ້າ.
[17]ແຕ່ຖ້າທ່ານເອີ້ນຕົວເອງວ່າເປັນຊາວຢິວ ແລະ ອີງໃສ່ກົດບັນຍັດ ແລະ ຊື່ນຊົມຍິນດີໃນການອວດພຣະເຈົ້າ,[18]ແລະ ທ່ານຮູ້ຈັກພ
ຣະປະສົງຂອງພຣະອົງ ແລະ ອະນຸຍາດໃນສິ່ງທີ່ດີເລີດໄດ້ ເພາະວ່າທ່ານໄດ້ຮຽນຮູ້ກົດບັນຍັດແລ້ວ;
[19]ແລະຖ້າທ່ານຫມັ້ນໃຈວ່າຕົວທ່ານເອງເປັນຜູ້ຈູງຄົນຕາບອດ, ເປັນຄວາມສະຫວ່າງໃຫ້ແກ່ຄົນທັງຫລາຍທີ່ຢູ່ໃນຄວາມມືດ,[20]ເປັນຜູ້
ສັ່ງສອນຄົນໂງ່ຈ້າ, ເປັນຄຣູສອນເດັກນ້ອຍ, ແລະ ວ່າທ່ານມີກົດບັນຍັດໃນຮູບແບບຂອງຄວາມຮູ້ແລະຄວາມຈິງ,
ແລ້ວສິ່ງນີ້ມີຜົນແນວໃດໃນວິທີທາງທີ່ທ່ານດຳຣົງຊີວິດ?
[21]ທ່ານຊຶ່ງເປັນຜູ້ທີ່ສອນຄົນອື່ນ, ທ່ານຈະບໍ່ສອນໂຕເອງແດ່ບໍ? ທ່ານຜູ້ທີ່ເທສະຫນາວ່າບໍ່ຄວນລັກຊັບ, ແລ້ວໂຕທ່ານເອງລັກຫລືບໍ່?
[22]ທ່ານຜູ້ທີ່ສອນວ່າບໍ່ຄວນຫລິ້ນຊູ້, ໂຕທ່ານເອງໄດ້ຫລິ້ນຊູ້ຫລືບໍ່? ທ່ານຜູ້ທີ່ບໍ່ມັກຮູບເຄົາຣົບ, ໂຕທ່ານເອງໄດ້ປຸ້ນວິຫານຫລືບໍ່?
[23]ທ່ານຜູ້ທີ່ຊື່ນຊົມຍິນດີໃນການອວດອ້າງກົດບັນຍັດ, ໂຕທ່ານເອງຍັງລົບລູ່ພຣະເຈົ້າໂດຍການປະພຶດຜິດກົດບັນຍັດຫລືບໍ່?[24]ເພາະມີຂຽນໄວ້ວ່າ.
"ຄົນຕ່າງຊາດເວົ້າລົບລູ່ພຣະນາມຂອງພຣະເຈົ້າກໍເພາະທ່ານທັງຫລາຍ"
[25]ຖ້າທ່ານເຊື່ອຟັງກົດບັນຍັດ ການເຂົ້າສູ່ພິທີຕັດກໍເປັນປະໂຫຍດແກ່ທ່ານແທ້ໆ, ແຕ່ຖ້າທ່ານເປັນຜູ້ລະເມີດກົດບັນຍັດ, ການທີ່ທ່ານເຂົ້າສູ່ພິ
ທີຕັດນັ້ນກໍເທົ່າກັບວ່າບໍ່ໄດ້ເຂົ້າເລີຍ.[26]ຖ້າວ່າຜູ້ທີ່ບໍ່ໄດ້ເຂົ້າຮັບການຕັດຮັກສາຂໍ້ກົດບັນຍັດໄວ້ໄດ້ແລ້ວ, ການທີ່ເຂົາບໍ່ໄດ້ເຂົ້າພິທີການຕັດນັ້ນກໍຈະຖື
ຄືກັບວ່າໄດ້ເຂົ້າພິທີການຕັດແລ້ວບໍ່ແມ່ນບໍ?[27]ແລະ ຄົນທີ່ບໍ່ໄດ້ເຂົ້າພິທີການຕັດໂດຍ ທັມະຊາດຂອງພວກເຂົາ ຈະປັບໂທດທ່ານໄດ້ບໍ່ແມ່ນ
ບໍຖ້າເຂົາປະຕິບັດຕາມກົດບັນຍັດ? ນີ້ເປັນເພາະວ່າທ່ານມີພຣະຄັມພີຂຽນໄວ້ແລ້ວ ແລະ ໄດ້ເຂົ້າການພິທີຕັດແລ້ວ, ແຕ່ຍັງລະເມີດກົດບັນ
ຍັດນັ້ນ!
[28]ເພາະວ່າເຂົາບໍ່ແມ່ນຄົນຢິວທີ່ເປັນຄົນຢິວແຕ່ພຽງພາຍນອກເທົ່ານັ້ນ; ແລະ ການເຂົ້າພິທີຕັດກໍບໍ່ແມ່ນການເຂົ້າພິທີຕັດພຽງແຕ່ຝ່າຍເນື້ອຫ
ນັງພາຍນອກເທົ່ານັ້ນ.[29]ແຕ່ເຂົາເປັນຄົນຢິວພາຍໃນ, ແລະ ການເຂົ້າພິທີຕັດນັ້ນກໍເປັນເລື່ອງຂອງຈິດໃຈ, ໃນວິນຍານ, ບໍ່ແມ່ນຕາມຕົວກົດບັນຍັດ.
ຄົນແບບນັ້ນພຣະເຈົ້າຈະຊົງຍົກຍ້ອງ ແຕ່ມະນຸດບໍ່ຍົກຍ້ອງ.


generated on Tue Jun 17 19:01:42 2025

3 1ສະນັ້ນ ພວກຊາວຢິວຈະໄດ້ປຽບຄົນອື່ນແນວໃດ? ແລະການເຂົ້າພິທີຕັດນັ້ນຈະມີປະໂຫຍດອັນໃດ?2ມີປະໂຫຍດຫລວງຫລາຍໃນທຸກທາງ.
ສິ່ງທີ່ສຳຄັນທີ່ສຸດຄື, ພວກຊາວຢິວໄດ້ເປັນຜູ້ມອບຄວາມໄວ້ວາງໃຈໃຫ້ຮັກສາພຣະຄຳສັ່ງຂອງພຣະເຈົ້າ.

3ເຖິງມີພວກຊາວຢິວບາງຄົນທີ່ບໍ່ມີຄວາມເຊື່ອ? ຄວາມບໍ່ເຊື່ອຂອງພວກເຂົາເຫລົ່ານັ້ນ ຈະເຮັດໃຫ້ຄວາມຊື່ສັດຂອງພຣະເຈົ້າບໍ່ມີປະໂຫຍດບໍ່?
4ຂໍຢ່າໃຫ້ເປັນແບບນັ້ນເລີຍ. ເຖິງແມ່ນວ່າ, ມະນຸດທຸກຄົນເວົ້າຕົວະ, ແຕ່ກໍຂໍໃຫ້ພຣະເຈົ້າຊົງເປັນຄວາມຈິງເຖີດ. ຕາມທີ່ມີຂຽນໄວ້ວ່າ,
"ເພື່ອພຣະອົງຈະໄດ້ປະກົດວ່າ ຊົງເປັນຜູ້ຊອບທັມໃນທຸກໆພຣະຄຳສັ່ງຂອງພຣະອົງ, ແລະ ຊົງມີຊັຍເມື່ອເຂົາຕັດສິນພຣະອົງ."
5ແຕ່ຖ້າຄວາມຊອບທັມຂອງພວກເຮົາສະແດງໃຫ້ເຫັນເຖິງຄວາມຊອບທັມຂອງພຣະເຈົ້າແລ້ວ, ພວກເຮົາຈະວ່າຢ່າງໃດ?
ພວກເຮົາສາມາດຈະກ່າວວ່າ ພຣະເຈົ້າບໍ່ຍຸດຕິທັມເມື່ອພຣະອົງຊົງໂກດຮ້າຍລົງໂທດບໍ່?
(ຂ້າພະເຈົ້າເວົ້າຕາມເຫດຜົນຂອງມະນຸດ.)6ຂໍຢ່າໃຫ້ເປັນເຊັ່ນນັ້ນເລີຍ! ເພາະຖ້າເປັນເຊັ່ນນັ້ນແລ້ວ ພຣະເຈົ້າຈະຊົງພິພາກສາໂລກໄດ້ແນວໃດ?
7ແຕ່ຖ້າຄວາມຈິງຂອງພຣະເຈົ້າປາກົດແຈ້ງເດັ່ນຂຶ້ນຜ່ານທາງຄຳເວົ້າຕົວະຂອງຂ້າພຣະເຈົ້າ
ຈົນເຮັດໃຫ້ພຣະອົງໄດ້ຮັບຄຳສັນຣະເສີນຢ່າງເຕັມທີ່, ເປັນຫຍັງເຂົາຈຶ່ງຍັງລົງໂທດຂ້າພຣະເຈົ້າວ່າເປັນຄົນບາບ?8ເປັນຫຍັງພວກເຮົາຈຶ່ງບໍ່ເວົ້າ,
ຢ່າງທີ່ມີຄົນລາຍງານ ໃສ່ຄວາມພວກເຮົາ, ແລະດັ່ງທີ່ບາງຄົນຢືນຢັນວ່າພວກເຮົາກ່າວວ່າ, "ໃຫ້ພວກເຮົາເຮັດຄວາມຊົ່ວ,
ເພື່ອທີ່ວ່າຄວາມດີຈະເກີດຂຶ້ນ"? ການຕັດສິນລົງໂທດຄົນເຫລົ່ານັ້ນກໍຍຸດຕິທັມແລ້ວ.
9ຖ້າເຊັ່ນນັ້ນຈະວ່າແນວໃດ? ພວກເຮົາຈະໄດ້ປຽບບໍ່? ຫລືບໍ່ໄດ້ຫຍັງເລີຍ. ເພາະພວກເຮົາໄດ້ອະທິບາຍໃຫ້ເຫັນແລ້ວວ່າ
ມະນຸດທຸກຄົນທັງຊາວຢິວ ແລະ ຊາວກຣີກ, ທັງຫມົດ, ຕ່າງກໍຢູ່ໃຕ້ອຳນາດຂອງຄວາມບາບ.10ສິ່ງນີ້ເປັນຕາມທີ່ຂຽນໄວ້ວ່າ:
"ບໍ່ມີຜູ້ໃດເປັນຜູ້ຊອບທັມຈັກຄົນດຽວ, ບໍ່ມີເລີຍ.
11ບໍ່ມີຄົນທີ່ເຂົ້າໃຈ, ບໍ່ມີຄົນທີ່ສະແຫວງຫາພຣະເຈົ້າ.12ພວກເຂົາທຸກຄົນຫລົງຜິດໄປຫມົດ. ພວກເຂົາກາຍເປັນຄົນທີ່ບໍ່ມີຄ່າຄືກັນທັງສິ້ນ.
ບໍ່ມີຄົນທີ່ເຮັດຄວາມດີ, ບໍ່ມີເລີຍແມ່ນແຕ່ຄົນດຽວ.
13ລຳຄໍຂອງພວກເຂົາຄືບ່ອນຝັງສົບທີ່ເປີດຢູ່. ພວກເຂົາໃຊ້ລີ້ນໃນການຫລອກລວງ. ພິດຂອງງູຮ້າຍຢູ່ໃຕ້ປາກຂອງພວກເຂົາ.
14ປາກຂອງພວກເຂົາເຕັມໄປດ້ວຍຄຳສາບແຊ່ງ ແລະ ຄຳຂົມຂື່ນ.
15ຕີນຂອງພວກເຂົາວ່ອງໄວໃນການເຮັດໃຫ້ນອງເລືອດ.16ໃນເສັ້ນທາງຂອງພວກເຂົາມີຄວາມຈິບຫາຍ ແລະ ຄວາມທຸກທໍຣະມານ.17ຄົນເຫລົ່ານີ້
ບໍ່ຮູ້ຈັກທາງແຫ່ງສັນຕິສຸກ.18ພວກເຂົາບໍ່ເຄີຍຄິດທີ່ຈະຢຳເກງພຣະເຈົ້າເລີຍ."
19ບັດນີ້ ພວກເຮົາຮູ້ແລ້ວວ່າ ກົດບັນຍັດທຸກຂໍ້ທີ່ໄດ້ກ່າວນັ້ນ, ກໍໄດ້ກ່າວແກ່ຄົນເຫລົ່ານັ້ນທີ່ຢູ່ໃຕ້ກົດບັນຍັດ. ເພື່ອຈະປິດປາກທຸກຄົນ,
ແລະເພື່ອໃຫ້ມະນຸດທຸກຄົນໃນໂລກສາມາດຕອບຄຳຖາມຂອງພຣະເຈົ້າ ສຳລັບຄວາມບາບທີ່ເຮັດໄດ້.
20ນີ້ເປັນເພາະວ່າໃນສາຍພຣະເນດຂອງພຣະເຈົ້າ ບໍ່ມີມະນຸດຄົນໃດເປັນຜູ້ຊອບທັມ. ໂດຍການປະພຶດຕາມກົດບັນຍັດໄດ້ ເພາະວ່າກົດບັນ
ຍັດນັ້ນເຮັດໃຫ້ເຮົາຮູ້ຈັກບາບ.
21ແຕ່ບັດນີ້ ຄວາມຊອບທັມຂອງພຣະເຈົ້າໄດ້ປາກົດນອກເຫນືອກົດບັນຍັດ. ໂດຍມີພະຍານຄືກົດບັນຍັດ ແລະ ພວກຜູ້ປະກາດພຣະຄັມ,22ນັ້ນຄື,
ຄວາມຊອບທັມຂອງພຣະເຈົ້າຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດເຈົ້າ ສຳລັບທຸກຄົນທີ່ເຊື່ອ. ເພາະວ່າຄົນທັງຫລາຍບໍ່ແຕກຕ່າງກັນ.
23ເພາະວ່າທຸກຄົນເຮັດບາບ ແລະເສື່ອມຈາກພຣະຣັດສະຫມີຂອງພຣະເຈົ້າ,
24ແຕ່ພຣະອົງຊົງມີພຣະຄຸນໃນການເຮັດໃຫ້ພວກເຂົາເປັນຜູ້ຊອບທັມໂດຍບໍ່ຮັບຜົນຕອບແທນ ໂດຍທາງການໄຖ່ຂອງພຣະເຢຊູຄຣິດເຈົ້າ.
25ເພາະພຣະເຈົ້າໄດ້ຊົງຕັ້ງພະເຢຊູຄຣິດເຈົ້າໄວ້ໃຫ້ເປັນເຄື່ອງບູຊາໄຖ່ບາບຜ່ານຄວາມເຊື່ອໃນເລືອດຂອງພຣະອົງ.
ພຣະເຈົ້າໄດ້ຊົງມອບພຣະຄຣິດໃຫ້ເປັນຫລັກຖານຂອງຄວາມຍຸດຕິທັມຂອງພຣະອົງ,
ເນື່ອງມາຈາກການທີ່ບໍ່ຖືໂທດຕໍ່ຄວາມບາບທີ່ຜ່ານມາ26ໃນຄວາມອົດກັ້ນຂອງພຣະອົງ.
ສິ່ງນີ້ເກີດຂຶ້ນເພື່ອສຳແດງໃຫ້ເຫັນເຖິງຄວາມຊອບທັມຂອງພຣະອົງໃນຍຸກປະຈຸບັນນີ້.
ເພື່ອວ່າພຣະອົງຈະໄດ້ຊົງພິສູດພຣະອົງເອງວ່າຊົງເປັນຜູ້ຊອບທັມ,
ແລະສຳແດງວ່າພຣະອົງຈະຊົງເຮັດໃຫ້ທຸກຄົນທີ່ເຊື່ອໃນພຣະເຢຊູຄຣິດເຈົ້າເປັນຜູ້ຊອບທັມດ້ວຍ.
27ຖ້າຢ່າງນັ້ນ ຂ້າພຣະເຈົ້າຈະເອົາສິ່ງໃດມາໂອ້ອວດກໍຫມົດຫົນທາງ? ຈະອ້າງຫລັກການອັນໃດວ່າຫມົດຫົນທາງ?
ອ້າງຫລັກການປະຕິບັດຕາມກົດບັນຍັດບໍ່? ບໍ່ແມ່ນ, ແຕ່ຕ້ອງອ້າງຫລັກຂອງຄວາມເຊື່ອ.28ແລ້ວພວກເຮົາທັງຫລາຍສະຫລຸບວ່າ
ຄົນໃດຄົນຫນຶ່ງຈະເປັນຄົນຊອບທັມໄດ້ ກໍໂດຍຄວາມເຊື່ອ ທີ່ປາສະຈາກການປະຕິບັດຕາມກົດບັນຍັດ.
29ຫລືວ່າພຣະເຈົ້ານັ້ນຊົງເປັນພຣະເຈົ້າຂອງຊາວຢິວເທົ່ານັ້ນບໍ່? ພຣະອົງບໍ່ຊົງເປັນພຣະເຈົ້າຂອງຄົນຕ່າງຊາດດ້ວຍບໍ່? ແມ່ນແລ້ວ,
ພຣະອົງຊົງເປັນພຣະເຈົ້າຂອງຄົນຕ່າງຊາດດ້ວຍ.30ຖ້າພຣະເຈົ້າຊົງເປັນພຣະເຈົ້າອົງດຽວຢ່າງແທ້ຈິງແລ້ວ,
ພຣະອົງຈະເຮັດໃຫ້ຄົນທີ່ເຂົ້າພິທີຕັດເປັນຄົນຊອບທັມໂດຍຄວາມເຊື່ອ, ແລະ
ຈະຊົງເຮັດໃຫ້ຄົນທີ່ບໍ່ເຂົ້າພິທີຕັດເປັນຄົນຊອບທັມຜ່ານທາງຄວາມເຊື່ອເຊັ່ນດຽວກັນ.
31ຖ້າເຊັ່ນນັ້ນ ພວກເຮົາຈະຍົກເລີກກົດບັນຍັດໂດຍຄວາມເຊື່ອບໍ່? ຂໍຢ່າໃຫ້ເປັນແບບນັ້ນເລີຍ! ພວກເຮົາຍົກຊູກົດບັນຍັດຂຶ້ນຕ່າງຫາກ.

4 [1]ຖ້າເຊັ່ນນັ້ນ ພວກເຮົາຈະວ່າແນວໃດເລື່ອງອັບຣາຮາມ, ບັນພະບຸຣຸດຂອງພວກເຮົາຕາມຝ່າຍເນື້ອຫນັງ?
[2]ເພາະຖ້າອັບຣາຮາມເປັນຜູ້ຊອບທັມໂດຍການປະຕິບັດ, ທ່ານກໍມີເຫດຜົນທີ່ຈະອວດໄດ້, ແຕ່ກໍບໍ່ແມ່ນຈຳເພາະພຣະພັກພຣະເຈົ້າ.
[3]ເພາະພຣະຄັມພີວ່າແນວໃດ? ເວົ້າວ່າ "ອັບຣາຮາມເຊື່ອໃນພຣະເຈົ້າ, ແລະພຣະເຈົ້າຊົງຖືວ່າເພິ່ນເປັນຄົນຊອບທັມ."

[4]ຝ່າຍຄົນທີ່ເຮັດວຽກ, ກໍບໍ່ຖືວ່າຄ່າຕອບແທນທີ່ໄດ້ຮັບນັ້ນເປັນລາງວັນ, ແຕ່ຖືວ່າເປັນຄ່າແຮງຂອງງານທີ່ໄດ້ເຮັດ.
[5]ແຕ່ສ່ວນຄົນທີ່ບໍ່ໄດ້ອາໄສການປະຕິບັດ ແຕ່ເຊື່ອໃນພຣະອົງຜູ້ຊົງເຮັດໃຫ້ຄົນອະທັມເປັນຄົນຊອບທັມໄດ້ນັ້ນ,
ພຣະເຈົ້າຊົງຖືວ່າຄວາມເຊື່ອຂອງເຂົາເປັນຄວາມຊອບທັມ.
[6]ດາວິດໄດ້ກ່າວເຖິງຄວາມສຸກຂອງຄົນທີ່ພຣະເຈົ້າຊົງຖືວ່າເປັນຄົນຊອບທັມໂດຍບໍ່ໄດ້ອາໄສການປະຕິບັດ.[7]ເພິ່ນກ່າວວ່າ,
"ຄົນທັງຫລາຍຊຶ່ງພຣະເຈົ້າຊົງໃຫ້ອະພັຍຈາກຄວາມຊົ່ວຮ້າຍຂອງພວກເຂົາແລ້ວ, ແລະ
ພຣະເຈົ້າຊົງປົກປິດບາບຂອງເຂົາແລ້ວກໍໄດ້ຮັບການອວຍພອນ.[8]ບຸກຄົນທີ່ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງຖືໂທດກໍເປັນພຣະພອນ."
[9]ແລ້ວເຊັ່ນນັ້ນ ພຣະພອນນີ້ມີແກ່ຄົນທີ່ເຂົ້າພິທີຕັດພວກດຽວບໍ, ຫລືວ່າມີແກ່ຄົນທີ່ບໍ່ໄດ້ເຂົ້າພິທີຕັດດ້ວຍ? ເພາະພວກເຮົາກ່າວວ່າ,
"ເພາະຄວາມເຊື່ອໄດ້ຖືວ່າອັບຣາຮາມເປັນຄົນຊອບທັມ."[10]ຖ້າເຊັ່ນນັ້ນແລ້ວ ພຣະເຈົ້າຖືແນວໃດ? ເມື່ອອັບຣາຮາມເຂົ້າພິທີຕັດແລ້ວບໍ, ຫລື
ເມື່ອຍັງບໍ່ໄດ້ເຂົ້າພິທີຕັດ? ບໍ່ແມ່ນເມື່ອເພິ່ນເຂົ້າພິທີຕັດແລ້ວ, ແຕ່ເມື່ອເພິ່ນຍັງບໍ່ໄດ້ເຂົ້າພິທີຕັດ.
[11]ອັບຣາຮາມໄດ້ຮັບເຄື່ອງຫມາຍແຫ່ງການເຂົ້າພິທີຕັດ. ເຊິ່ງເປັນຕຣາປະທັບແຫ່ງຄວາມຊອບທັມ ອັນມາຈາກຄວາມເຊື່ອທີ່ທ່ານໄດ້ມີຢູ່
ເມື່ອທ່ານຍັງບໍ່ໄດ້ເຂົ້າພິທີການຕັດ. ຜົນແຫ່ງເຄື່ອງຫມາຍ ນີ້ຄື ທ່ານຈະໄດ້ກາຍເປັນບິດາຂອງຄົນທັງປວງທີ່ເຊື່ອ,
ແມ່ນວ່າພວກເຂົາຍັງບໍ່ໄດ້ເຂົ້າພິທີການຕັດ. ນີ້ຫມາຍຄວາມວ່າພຣະເຈົ້າຈະຊົງຖືວ່າພວກເຂົາເປັນຜູ້ຊອບທັມ.
[12]ສິ່ງນີ້ຍັງຫມາຍຄວາມວ່າອັບຣາຮາມຈະກາຍເປັນບິດາແຫ່ງການເຂົ້າພິທີຕັດແລ້ວເທົ່ານັ້ນ
ແຕ່ຍັງເປັນຄົນທີ່ມີຄວາມເຊື່ອຕາມແບບຂອງອັບຣາຮາມ ບິດາຂອງພວກເຮົາທັງຫລາຍດ້ວຍ ແລະ
ນີ້ຄືຄວາມເຊື່ອທີ່ທ່ານມີຢູ່ເມື່ອທ່ານຍັງບໍ່ໄດ້ເຂົ້າພິທີການຕັດ.
[13]ເພາະວ່າພຣະສັນຍາທີ່ປຣະທານແກ່ອັບຣາຮາມ ແລະຜູ້ສືບເຊື້ອສາຍຂອງທ່ານທີ່ວ່າພວກເຂົາຈະໄດ້ທັງແຜ່ນດິນໂລກເປັນມໍຣະດົກນັ້ນ
ບໍ່ໄດ້ມາໂດຍກົດບັນຍັດ ແຕ່ມາໂດຍຄວາມຊອບທັມທີ່ມາຈາກຄວາມເຊື່ອ.[14]ເພາະຖ້າຄົນເຫລົ່ານັ້ນທີ່ຖືກົດບັນຍັດເປັນເຊື້ອສາຍ, ຄວາມເຊື່ອ
ກໍບໍ່ມີປະໂຫຍດ, ແລະພຣະສັນຍາກໍເປັນໂມຄະ.[15]ເພາະກົດບັນຍັດນຳໄປສູ່ຄວາມຄຽດແຄ້ນ, ແຕ່ບ່ອນໃດບໍ່ມີກົດບັນຍັດ, ບ່ອນ
ນັ້ນກໍບໍ່ມີການລະເມີດ.
[16]ດ້ວຍເຫດຜົນນີ້, ສິ່ງນີ້ຈຶ່ງເກີດຂຶ້ນໂດຍຄວາມເຊື່ອ ເພື່ອທີ່ຈະໄດ້ເປັນໂດຍພຣະຄຸນ ດັ່ງນັ້ນ ພຣະສັນຍາຈຶ່ງເປັນສິ່ງທີ່ແນ່ນອນສຳລັບຜູ້ສືບເຊື້ອ
ສາຍຂອງທ່ານທຸກຄົນ ແລະ ຜູ້ສືບເຊື້ອສາຍເຫລົ່ານີ້ບໍ່ແມ່ນພຽງແຕ່ຄົນທີ່ຮູ້ກົດບັນຍັດເທົ່ານັ້ນ, ແຕ່ລວມເຖິງຄົນເຫລົ່າ
ນັ້ນທີ່ມີຄວາມເຊື່ອຄືກັນກັບອັບຣາຮາມດ້ວຍ. ເພາະທ່ານເປັນບິດາຂອງພວກເຮົາທຸກຄົນ,[17]ຕາມທີ່ມີຄຳຂຽນໄວ້ວ່າ, "ເຮົາໄດ້ໃຫ້ທ່ານເປັນບິດາ
ຂອງປະຊາຊາດຫລວງຫລາຍ." ອັບຣາຮາມຢູ່ຕໍ່ຫນ້າພຣະອົງທີ່ທ່ານເຊື່ອ, ນັ້ນຄື, ພຣະເຈົ້າ, ຜູ້ທີ່ໃຫ້ຊີວິດແກ່ຄົນທີ່ຕາຍແລ້ວ ແລະ
ເອີ້ນສິ່ງທີ່ຍັງບໍ່ໄດ້ມີໃຫ້ມີຂຶ້ນມາ.
[18]ບໍ່ວ່າສະຖານະການພາຍນອກຈະເປັນແນວໃດ, ອັບຣາຮາມຍັງເຊື່ອຫມັ້ນໃຈໃນພຣະເຈົ້າສຳລັບອະນາຄົດ. ດັ່ງນັ້ນ ທ່ານ
ຈຶ່ງໄດ້ກາຍເປັນບິດາຂອງປະຊາຊາດຫລວງຫລາຍ, ຕາມທີ່ພຣະເຈົ້າໄດ້ກ່າວໄວ້ວ່າ, "ເຊື້ອສາຍຂອງທ່ານຈະຫລວງຫລາຍຢ່າງ
ນັ້ນ."[19]ທ່ານບໍ່ໄດ້ອ່ອນແອໃນຄວາມເຊື່ອ. ອັບຣາຮາມເຂົ້າໃຈວ່າຮ່າງກາຍຂອງທ່ານບໍ່ສາມາດທີ່ຈະມີບຸດໄດ້ແລ້ວ
(ເພາະທ່ານມີອາຍຸປະມານຮ້ອຍປີແລ້ວ). ທ່ານຍັງຍອມຮັບວ່າມົດລູກຂອງນາງຊາຣາບໍ່ສາມາດມີບຸດໄດ້ແລ້ວອີກຕໍ່ໄປ.
[20]ແຕ່ເພາະເປັນພຣະສັນຍາຂອງພຣະເຈົ້າ, ອັບຣາຮາມຈຶ່ງບໍ່ໄດ້ຫວັ່ນໄຫວເລີຍ. ແຕ່, ທ່ານກັບມີຄວາມເຊື່ອຫມັ້ນຄົງຫລາຍຂຶ້ນ
ແລະຖວາຍສັນຣະເສີນແດ່ພຣະເຈົ້າ.[21]ທ່ານເຊື່ອຫມັ້ນຢ່າງສຸດໃຈວ່າ ສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້, ພຣະອົງຈະສາມາດເຮັດໃຫ້ສຳເລັດໄດ້.
[22]ດ້ວຍເຫດນີ້ ພຣະເຈົ້າຈຶ່ງຖືວ່າຄວາມເຊື່ອຂອງທ່ານເປັນຄວາມຊອບທັມຂອງທ່ານດ້ວຍ.
[23]ການຖືວ່າເປັນຄວາມຊອບທັມຂອງທ່ານນັ້ນ, ບໍ່ໄດ້ມີຂຽນໄວ້ ສຳລັບອັບຣາຮາມແຕ່ພຽງຜູ້ດຽວ.[24]ແຕ່ຂຽນໄວ້ສຳລັບພວກເຮົານຳອີກ,
ເພາະຈະຊົງຖືວ່າຂ້າພຣະເຈົ້າເປັນຄົນຊອບທັມ, ຄືພວກເຮົາທີ່ເຊື່ອໃນພຣະອົງ ຜູ້ຊົງໃຫ້ອົງພຣະເຢຊູຄ
ຣິດເຈົ້າຂອງພວກເຮົາຟື້ນຄືນຂຶ້ນຈາກຄວາມຕາຍ.[25]ນັ້ນຄືຜູ້ທີ່ຊົງຖືກຍຶດໄວ້ເພາະການລ່ວງລະເມີດຂອງພວກເຮົາ ແລະໄດ້ຊົງ
ຟື້ນຂຶ້ນຈາກຄວາມຕາຍ ເພື່ອໃຫ້ພວກເຮົາເປັນຄົນຊອບທັມ.

 generated on Tue Jun 17 19:01:42 2025

5 [1]ເມື່ອພວກເຮົາໄດ້ເປັນຄົນຊອບທັມໂດຍຄວາມເຊື່ອແລ້ວ, ພວກເຮົາຈຶ່ງມີສັນຕິສຸກໃນພຣະເຈົ້າຜ່ານທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ.
[2]ໂດຍທາງພຣະອົງ ພວກເຮົາຍັງໄດ້ເຂົ້າມາຢູ່ໃນພຣະຄຸນນີ້ທີ່ພວກເຮົາຢືນຢູ່ໂດຍຄວາມເຊື່ອ. ພວກເຮົາຈຶ່ງມີຄວາມຊື່ນ
ຊົມຍິນດີໃນຄວາມຫມັ້ນໃຈທີ່ພຣະເຈົ້າປຣະທານໃຫ້ແກ່ພວກເຮົາເພື່ອອະນາຄົດ, ແມ່ນຄວາມຫມັ້ນໃຈທີ່ວ່າພວກເຮົາຈະມີສ່ວນໃນພຣະ
ສະຫງ່າຣາສີຂອງພຣະເຈົ້າ.

[3]ຍິ່ງໄປກ່ວານັ້ນ, ພວກເຮົາຍັງຊື່ນຊົມຍິນດີໃນຄວາມທຸກຍາກຂອງພວກເຮົາ. ເພາະພວກເຮົາຮູ້ວ່າຄວາມທຸກຍາກນັ້ນເຮັດໃຫ້ເກີດຄວາມອົດທົນ.
[4]ແລະ ຄວາມອົດທົນເຮັດໃຫ້ພຣະເຈົ້າຊົງເຫັນວ່າພວກເຮົາເປັນຄົນຮັບໃຊ້ທີ່ໃຊ້ການໄດ້, ແລະ ການທີ່ພຣະເຈົ້າຊົງເຫັນເຊັ່ນ
ນັ້ນເຮັດໃຫ້ເກີດຄວາມຫມັ້ນໃຈໃນອະນາຄົດ.[5]ຄວາມຫມັ້ນ ໃຈນີ້ຈະບໍ່ເຮັດໃຫ້ເຮົາຜິດຫວັງ,
ເພາະວ່າຄວາມຮັກຂອງພຣະເຈົ້າໄດ້ຫລັ່ງໄຫລເຂົ້າສູ່ຈິດໃຈຂອງພວກເຮົາ ຜ່ານທາງພຣະວິນຍານບໍຣິສຸດເຈົ້າ ຊຶ່ງພຣະເຈົ້າໄດ້ປຣະ
ທານໃຫ້ແກ່ພວກເຮົາແລ້ວ.
[6]ໃນຂະນະທີ່ພວກເຮົາອ່ອນແອຢູ່ນັ້ນ, ພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອຊ່ວຍຄົນອະທັມໃນເວລາທີ່ເຫມາະສົມ.
[7]ເພາະວ່າບໍ່ມີໃຜຈະຕາຍແທນຄົນຊອບທັມ. ແຕ່ບາງຄັ້ງ, ກໍມີຄົນກ້າທີ່ຈະຕາຍເພື່ອຄົນດີກໍໄດ້.
[8]ແຕ່ພຣະເຈົ້າໄດ້ພິສູດຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາທັງຫລາຍ, ເພາະວ່າໃນຂະນະທີ່ພວກເຮົາຍັງເປັນຄົນບາບຢູ່ນັ້ນ,
ພຣະຄຣິດໄດ້ສິ້ນພຣະຊົນເພື່ອພວກເຮົາ.[9]ເຫດສະນັ້ນ, ໃນຂະນະນີ້, ພວກເຮົາໄດ້ເປັນຄົນຄວາມຊອບທັມແລ້ວໂດຍພຣະໂລຫິດຂອງພຣະອົງ,
ພວກເຮົາຍິ່ງຈະພົ້ນຈາກຄວາມໂກດຮ້າຍຂອງພຣະເຈົ້າໂດຍພຣະໂລຫິດນັ້ນຫລາຍຍິ່ງຂຶ້ນໄປອີກ.
[10]ເພາະວ່າ, ຖ້າຂະນະທີ່ພວກເຮົາຍັງເປັນສັດຕຣູກັບພຣະເຈົ້າ,
ພວກເຮົາໄດ້ກັບຄືນດີກັບພຣະອົງຜ່ານທາງການສິ້ນພຣະຊົນຂອງພຣະບຸດຂອງພຣະອົງ, ຫລັງຈາກທີ່ພວກເຮົາໄດ້ກັບຄືນດີແລ້ວ,
ພວກເຮົາກໍຈະໄດ້ຮັບຄວາມພົ້ນໂດຍຊີວິດຂອງພຣະອົງຫລາຍຂຶ້ນ.[11]ບໍ່ພຽງແຕ່ເທົ່ານັ້ນ, ພວກເຮົາທັງ
ຫລາຍຍັງຊື່ນຊົມຍິນດີໃນພຣະເຈົ້າຜ່ານທາງພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງພວກເຮົາ, ຜູ້ຊົງເຮັດໃຫ້ພວກເຮົາໄດ້ກັບຄືນດີກັບພຣະເຈົ້າ.
[12]ເຫດສະນັ້ນ, ເຊັ່ນດຽວກັບທີ່ບາບເຂົ້າມາໃນໂລກຜ່ານທາງຄົນໆດຽວ, ໂດຍທາງນີ້ ຄວາມຕາຍກໍເຂົ້າມາຜ່ານທາງບາບນັ້ນ.
ແລະຄວາມຕາຍກໍໄດ້ແຜ່ລາມອອກໄປສູ່ມະນຸດທຸກຄົນ, ເພາະວ່າມະນຸດທຸກຄົນໄດ້ເຮັດບາບ.[13]ຄວາມຈິງບາບໄດ້ມີຢູ່ໃນໂລກແລ້ວ, ກ່ອນທີ່ຈະ
ມີກົດບັນຍັດ, ແຕ່ບໍ່ມີເຫດຜົນທີ່ຈະນັບວ່າເປັນບາບໃນເມື່ອບໍ່ມີກົດບັນຍັດ.
[14]ເຖິງຢ່າງໃດກໍຕາມ, ຄວາມຕາຍໄດ້ຄອບງຳຕະຫລອດມາ ຕັ້ງແຕ່ອາດາມຈົນເຖິງໂມເຊ,
ແມ່ນຄົນທີ່ບໍ່ໄດ້ເຮັດບາບຢ່າງດຽວກັບການບໍ່ເຊື່ອຟັງຂອງອາດາມ, ຜູ້ຊຶ່ງເປັນແບບຂອງຜູ້ທີ່ຈະສະເດັດມາພາຍຫຼັງ.[15]ແຕ່ເຖິງຢ່າງນັ້ນ,
ຂອງປະທານແຫ່ງພຣະຄຸນບໍ່ຄືກັບການລ່ວງລະເມີດນັ້ນ. ເພາະວ່າຖ້າຄົນຫລວງຫລາຍຕ້ອງຕາຍເພາະການລະເມີດຂອງຄົນໆດຽວແລ້ວ,
ຍິ່ງໄປກວ່ານັ້ນ ພຣະຄຸນຂອງພຣະເຈົ້າ ແລະຂອງປະທານໂດຍພຣະຄຸນຂອງພຣະອົງຜູ້ດຽວ, ຄືພຣະເຢຊູຄຣິດເຈົ້ານັ້ນ,
ກໍມີຄວາມອຸດົມສົມບູນສຳລັບຫລາຍໆຄົນ.
[16]ເພາະຂອງປຣະທານນັ້ນກໍບໍ່ຄືຜົນທີ່ເກີດຈາກຄົນດຽວທີ່ເຮັດບາບ. ເພາະວ່າໃນດ້ານຫນຶ່ງ, ການພິພາກສາລົງໂທດເກີດຂຶ້ນເນື່ອງຈາກການລະ
ເມີດຂອງມະນຸດຄົນຫນຶ່ງ. ແຕ່ໃນອີກດ້ານຫນຶ່ງ, ຂອງປະທານແຫ່ງພຣະຄຸນທີ່ນຳໄປສູ່ການເປັນຄົນຊອບທັມນັ້ນ ເກີດຂຶ້ນພາຍຫລັງຈາກທີ່ມີ
ການລະເມີດຫລາຍຄັ້ງ.[17]ເພາະວ່າຖ້າໂດຍການລະເມີດຂອງຄົນໆດຽວ, ເຮັດໃຫ້ຄວາມຕາຍຄອບງຳຜ່ານທາງຄົນນັ້ນ, ຍິ່ງໄປກວ່ານັ້ນ ຄົນທັງ
ຫລາຍທີ່ຮັບພຣະຄຸນອັນສົມບູນ ແລະ ຂອງປຣະທານແຫ່ງຄວາມຊອບທັມກໍໄດ້ຄອບຄອງຜ່ານທາງຊີວິດຂອງພຣະອົງຜູ້ດຽວ, ຄືພຣະເຢຊູຄຣິດ
ເຈົ້າ.
[18]ເຫດສະນັ້ນ, ການພິພາກສາລົງໂທດໄດ້ມາສູ່ມະນຸດທັງປວງຜ່ານທາງການລະເມີດຄັ້ງດຽວສັນໃດ, ການກະທຳອັນຊອບທັມຄັ້ງດຽວ
ກໍນຳຄວາມຊອບທັມແຫ່ງຊີວິດມາເຖິງຄົນທັງປວງສັນນັ້ນ.[19]ເພາະຄົນຈຳນວນຫລວງຫລາຍກາຍເປັນຄົນບາບ, ເພາະຄົນດຽວທີ່ບໍ່ເຊື່ອຟັງ ສັນໃດ
ຄົນເປັນຈຳນວນຫລາຍກໍຈະກາຍເປັນຄົນຊອບທັມ ເພາະພຣະອົງຜູ້ດຽວທີ່ໄດ້ຊົງເຊື່ອຟັງສັນນັ້ນ.
[20]ແຕ່ການທີ່ມີກົດບັນຍັດມາປະກອບ, ກໍເພື່ອທີ່ຈະເຮັດໃຫ້ການລະເມີດເບິ່ງເຫັນໄດ້ຊັດເຈນຂຶ້ນ. ແຕ່ບ່ອນໃດທີ່ມີບາບເກີດຂຶ້ນຫລາຍ,
ພຣະຄຸນກໍຍິ່ງຈະມີຄ່າຫລາຍໄປກວ່ານັ້ນອີກ.[21]ສິ່ງນີ້ເກີດຂຶ້ນເພື່ອທີ່ວ່າ, ບາບໄດ້ຄອບງຳເຮັດໃຫ້ເຖິງຄວາມຕາຍສັນໃດ,
ພຣະຄຸນກໍຄອບຄອງຜ່ານທາງຄວາມຊອບທັມໃຫ້ເຖິງຊີວິດນິຣັນດອນໂດຍທາງພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາສັນນັ້ນ.

 generated on Tue Jun 17 19:01:42 2025

6 [1]ຖ້າຢ່າງນັ້ນ ພວກເຮົາຈະເວົ້າແນວໃດ? ພວກເຮົາຄວນຈະເຮັດບາບຢູ່ຕໍ່ໄປ ເພື່ອໃຫ້ພຣະຄຸນປະກົດຫລາຍຂຶ້ນບໍ?[2]ຢ່າໃຫ້ເປັນຢ່າງນັ້ນເລີຍ.
ພວກເຮົາທີ່ຕາຍຕໍ່ບາບແລ້ວ, ຈະຍັງຄົງມີຊີວິດຢູ່ໃນບາບໄດ້ຢ່າງໃດ?
[3]ທ່ານບໍ່ຮູ້ບໍ່ວ່າຄົນທັງຫລາຍທີ່ໄດ້ຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດເຈົ້າ ກໍຍັງໄດ້ຮັບບັບຕິສະມາເຂົ້າໃນຄວາມຕາຍຂອງພຣະອົງດ້ວຍ?

[4]ເຫດສະນັ້ນ, ພວກເຮົາຈຶ່ງຖືກຝັງໄວ້ກັບພຣະອົງແລ້ວ ໂດຍການຮັບບັບຕິສະມາເຂົ້າໃນການຕາຍນັ້ນ.
ສິ່ງນີ້ເກີດຂຶ້ນເພື່ອວ່າພຣະຄຣິດໄດ້ຊົງຖືກຟື້ນຄືນຂຶ້ນມາຈາກຄວາມຕາຍໂດຍພຣະສະຫງ່າຣາສີຂອງພຣະບິດາເຈົ້າສັນໃດ,
ພວກເຮົາກໍຈະໄດ້ດໍາເນີນໃນຊີວິດໃຫມ່ສັນນັ້ນ.[5]ເພາະວ່າຖ້າພວກເຮົາໄດ້ເຂົ້າໃກ້ຊິດກັບພຣະອົງໃນຄວາມຕາຍຄືກັບພຣະອົງແລ້ວ,
ພວກເຮົາກໍຈະໄດ້ໃກ້ຊິດກັບພຣະອົງໃນການຟື້ນຄືນຂຶ້ນມາຈາກຄວາມຕາຍຄືກັນກັບພຣະອົງດ້ວຍເຊັ່ນກັນ.
[6]ພວກເຮົາທັງຫລາຍຮູ້ແລ້ວວ່າ, ຕົວເກົ່າຂອງພວກເຮົານັ້ນໄດ້ຖືກຄຶງໄວ້ກັບພຣະອົງແລ້ວ, ເພື່ອວ່າຕົວທີ່ມີບາບນັ້ນຈະໄດ້ຖືກທໍາລາຍໄປ.
ສິ່ງນີ້ເກີດຂຶ້ນເພື່ອວ່າພວກເຮົາຈະບໍ່ໄດ້ເປັນທາດຂອງບາບອີກຕໍ່ໄປ.
[7]ເພາະວ່າຜູ້ທີ່ຕາຍແລ້ວກໍໄດ້ຮັບການປະກາດວ່າຊອບທັມໃນເບື້ອງຂອງຄວາມບາບ.
[8]ແຕ່ຖ້າພວກເຮົາໄດ້ຕາຍແລ້ວກັບພຣະຄຣິດ, ພວກເຮົາເຊື່ອວ່າພວກເຮົາຈະມີຊີວິດຢູ່ກັບພຣະອົງດ້ວຍ.[9]ພວກເຮົາຮູ້ຢູ່ວ່າ
ພຣະຄຣິດໄດ້ຊົງເປັນຄືນຂຶ້ນມາຈາກຕາຍແລ້ວ, ແລະ ພຣະອົງຈະບໍ່ຕາຍອີກຕໍ່ໄປ. ຄວາມຕາຍຈະບໍ່ມີອໍານາດເຫນືອພຣະອົງອີກຕໍ່ໄປ.
[10]ໃນເລື່ອງທີ່ກ່ຽວກັບຄວາມຕາຍ ທີ່ວ່າພຣະອົງໄດ້ຊົງຕາຍຕໍ່ບາບນັ້ນ, ພຣະອົງໄດ້ຊົງຕາຍຄັ້ງດຽວເປັນພໍ. ຢ່າງໃດກໍຕາມ,
ຊີວິດທີ່ພຣະອົງຊົງດໍາເນີນຢູ່ນັ້ນກໍເພື່ອພຣະເຈົ້າ.[11]ໃນທໍານອງດຽວກັນ, ທ່ານຕ້ອງຖືວ່າຕົນເອງໄດ້ຕາຍຕໍ່ບາບ,
ແຕ່ມີຊີວິດຢູ່ເພື່ອພຣະເຈົ້າໃນພຣະເຢຊູຄຣິດເຈົ້າ.
[12]ເຫດສະນັ້ນ ຢ່າໃຫ້ບາບມີອໍານາດເຫນືອຮ່າງກາຍທີ່ຕ້ອງຕາຍຂອງທ່ານ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງຮ່າງກາຍນັ້ນ.
[13]ຢ່າຍົກອະໄວຍະວະໃນຮ່າງກາຍຂອງທ່ານໃຫ້ແກ່ບາບ, ເພື່ອເປັນເຄື່ອງມືໃນຄວາມຊົ່ວ. ແຕ່ຈົ່ງຖວາຍຕົວຂອງທ່ານແດ່ພຣະເຈົ້າ,
ຄືກັບຄົນທີ່ຟື້ນຄືນມາຈາກຄວາມຕາຍແລ້ວ ແລະມີຊີວິດຢູ່.
ແລະຈົ່ງຍົກອະໄວຍະວະໃນຮ່າງກາຍຂອງທ່ານແດ່ພຣະເຈົ້າເພື່ອເປັນເຄື່ອງໃຊ້ໃນຄວາມຊອບທັມ.[14]ຢ່າປ່ອຍໃຫ້ບາບມີອໍານາດເຫນືອທ່ານ.
ເພາະວ່າທ່ານບໍ່ໄດ້ຢູ່ໃຕ້ກົດບັນຍັດ, ແຕ່ຢູ່ໃຕ້ພຣະຄຸນ.
[15]ຖ້າເຊັ່ນນັ້ນຈະເປັນຢ່າງໃດ? ພວກເຮົາຈະເຮັດບາບເພາະວ່າພວກເຮົາບໍ່ຢູ່ໃຕ້ກົດບັນຍັດ, ແຕ່ຢູ່ໃຕ້ພຣະຄຸນບໍ? ຢ່າໃຫ້ເປັນຢ່າງນັ້ນເລີຍ.
[16]ທ່ານບໍ່ຮູ້ບໍ່ວ່າ ຖ້າທ່ານຍົກຕົວເອງໃຫ້ເປັນຜູ້ຮັບໃຊ້ຂອງຜູ້ໃດ ທ່ານກໍຕ້ອງເຊື່ອຟັງ ແລະເຮັດຕາມຄໍາສັ່ງຂອງຜູ້ນັ້ນ?
ນີ້ແມ່ນຄວາມຈິງບໍ່ວ່າທ່ານຈະເປັນຜູ້ຮັບໃຊ້ຂອງບາບທີ່ນໍາໄປສູ່ຄວາມຕາຍ,
ຫລືເປັນຜູ້ຮັບໃຊ້ຂອງການເຊື່ອຟັງຊຶ່ງນໍາໄປສູ່ຄວາມຊອບທັມກໍຕາມ.
[17]ແຕ່ຈົ່ງຂອບພຣະຄຸນພຣະເຈົ້າ! ເພາະວ່າໃນອະດີດ ນັ້ນ ທ່ານເປັນຜູ້ຮັບໃຊ້ຂອງບາບ,
ແຕ່ທ່ານມີໃຈເຊື່ອຟັງຫລັກຄໍາສອນນັ້ນທີ່ຊົງປຣະທານໃຫ້ແກ່ທ່ານ.[18]ທ່ານໄດ້ຮັບການປົດປ່ອຍໃຫ້ພົ້ນຈາກບາບແລ້ວ,
ແລະທ່ານກໍໄດ້ກາຍເປັນຜູ້ຮັບໃຊ້ຂອງຄວາມຊອບທັມ.
[19]ຂ້າພະເຈົ້າເວົ້າຢ່າງມະນຸດ ເພາະເນື້ອຫນັງຂອງທ່ານອ່ອນກໍາລັງ.
ເພາະທ່ານເຄີຍໃຫ້ອະໄວຍະວະຂອງຮ່າງກາຍທ່ານເປັນທາດຂອງຄວາມຊົ່ວມົວຫມອງ ແລະຂອງການຊົ່ວຮ້າຍສັນໃດ, ໃນທໍານອງດຽວກັນ,
ບັດນີ້, ທ່ານຈົ່ງໃຫ້ອະໄວຍະວະຂອງທ່ານເປັນທາດຂອງຄວາມຊອບທັມ ເພື່ອການຊໍາຣະໃຫ້ບໍຣິສຸດສັນນັ້ນ.
[20]ເພາະວ່າເມື່ອທ່ານເປັນທາດຂອງບາບ, ທ່ານກໍບໍ່ໄດ້ຢູ່ໃນຄວາມຊອບທັມ.[21]ຂະນະນັ້ນ, ທ່ານໄດ້ປະໂຫຍດອັນໃດໃນການເຫລົ່ານັ້ນ
ຊຶ່ງຕອນນີ້ທ່ານຮູ້ສຶກລະອາຍ? ດ້ວຍວ່າຜົນສຸດທ້າຍຂອງການເຫລົ່ານັ້ນກໍຄືຄວາມຕາຍ.
[22]ແຕ່ຂະນະນີ້ ເມື່ອທ່ານທັງຫລາຍພົ້ນຈາກການເປັນທາດຂອງບາບ ແລະໄດ້ເປັນທາດຂອງພຣະເຈົ້າແລ້ວ,
ຜົນທີ່ທ່ານໄດ້ຮັບກໍຄືການເຮັດໃຫ້ບໍຣິສຸດ. ແລະຜົນສຸດທ້າຍຄືຊີວິດນິຣັນດອນ.[23]ເພາະວ່າຄ່າຈ້າງຂອງຄວາມບາບຄືຄວາມຕາຍ,
ແຕ່ຂອງປຣະທານທີ່ບໍ່ເສັຽຄ່າຈາກພຣະເຈົ້າຄືຊີວິດນິຣັນດອນໃນພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າຂອງພວກເຮົາ.


generated on Tue Jun 17 19:01:42 2025

# 7

[1]ຫລືທ່ານບໍ່ຮູ້ບໍ, ອ້າຍນ້ອງທັງຫລາຍເອີຍ (ຂ້າພະເຈົ້າເວົ້າກັບຄົນທີ່ຮູ້ກົດບັນຍັດແລ້ວ), ວ່າກົດບັນຍັດນັ້ນມີອຳນາດເຫນືອມະນຸດ
ກໍສະເພາະໃນຂະນະທີ່ລາວຍັງມີຊີວິດຢູ່ເທົ່ານັ້ນ?

[2]ເພາະວ່າຜູ້ຍິງທີ່ສາມີຍັງມີຊີວິດຢູ່ນັ້ນ ຕ້ອງຢູ່ໃນກົດປະເພນີສາມີພັນຣະຍາ, ແຕ່ຖ້າສາມີຕາຍ, ນາງກໍພົ້ນຈາກກົດປະເພນີສາມີພັນຣະຍານັ້ນ.
[3]ສະນັ້ນ, ຖ້າຜູ້ຍິງນັ້ນໄປຢູ່ກັບຊາຍຄົນອື່ນໃນຂະນະທີ່ສາມີຍັງມີຊີວິດຢູ່, ນາງຈະຖືກເອີ້ນວ່າການຫລິ້ນຊູ້. ແຕ່ຖ້າສາມີຕາຍແລ້ວ,
ນາງກໍພົ້ນຈາກປະເພນີສາມີພັນຣະຍານັ້ນ, ເຖິງແມ່ນວ່ານາງໄປຢູ່ກັບຊາຍຄົນອື່ນນາງກໍບໍ່ໄດ້ຫລິ້ນຊູ້.
[4]ດ້ວຍເຫດນີ້, ພີ່ນ້ອງທັງຫລາຍ, ທ່ານໄດ້ຕາຍຕໍ່ກົດບັນຍັດຜ່ານທາງພຣະກາຍຂອງພຣະຄຣິດເຈົ້າ. ເພື່ອວ່າທ່ານຈະໄດ້ເປັນຂອງຜູ້ອື່ນ, ນັ້ນຄື,
ພຣະອົງຜູ້ຊົງຟື້ນຄືນຂຶ້ນມາຈາກຄວາມຕາຍແລ້ວ, ເພື່ອພວກເຮົາທັງຫລາຍຈະໄດ້ເກີດຜົນຖວາຍແດ່ພຣະເຈົ້າ.
[5]ເພາະວ່າເມື່ອພວກເຮົາດຳເນີນຊີວິດຕາມເນື້ອຫນັງ, ຕັນຫາຄວາມບາບ, ທີ່ກົດບັນຍັດເຮັດໃຫ້ເກີດຂຶ້ນນັ້ນ,
ໄດ້ເຮັດໃຫ້ອະໄວຍະວະຂອງພວກເຮົາເກີດຜົນທີ່ຈະນຳໄປສູ່ຄວາມຕາຍ.
[6]ແຕ່ບັດນີ້ພວກເຮົາໄດ້ພົ້ນຈາກກົດບັນຍັດແລ້ວ. ພວກເຮົາໄດ້ຕາຍຕໍ່ກົດບັນຍັດທີ່ເຄີຍດຶງພວກເຮົາໄວ້.
ເພື່ອທີ່ພວກເຮົາຈະໄດ້ຮັບໃຊ້ໃນແບບໃຫມ່ຕາມພຣະວິນຍານບໍຣິສຸດເຈົ້າ, ບໍ່ແມ່ນໃນຮູບແບບເກົ່າຕາມຕົວອັກສອນນັ້ນ.
[7]ຖ້າເຊັ່ນນັ້ນ ພວກເຮົາຈະເວົ້າແນວໃດ? ວ່າກົດບັນຍັດຄືບາບບໍ? ຢ່າໃຫ້ເປັນເຊັ່ນນັ້ນເລີຍ. ຢ່າງໃດກໍຕາມ, ຖ້າບໍ່ແມ່ນເພາະກົດບັນຍັດແລ້ວ.
ຂ້າພຣະເຈົ້າກໍຄົງບໍ່ຮູ້ຈັກບາບ ເພາະວ່າຖ້າກົດບັນຍັດ ບໍ່ໄດ້ຫ້າມວ່າ, "ຢ່າໂລບມາກ ຂ້າພຣະເຈົ້າກໍຈະບໍ່ຮູ້ວ່າແມ່ນຫຍັງຄືຄວາມໂລບ.
[8]ແຕ່ວ່າບາບໄດ້ຖືເອົາພຣະບັນຍັດເປັນຊ່ອງທາງທີ່ຈະເຮັດໃຫ້ຕັນຫາທຸກຢ່າງເກີດຂຶ້ນໃນຕົວຂ້າພຣະເຈົ້າ. ເພາະຖ້າບໍ່ມີກົດບັນຍັດ,
ບາບກໍຕາຍໄປ.
[9]ແຕ່ກ່ອນ ຂ້າພຣະເຈົ້າມີຊີວິດໂດຍບໍ່ມີກົດບັນຍັດ, ແຕ່ເມື່ອກົດບັນຍັດຂອງພຣະເຈົ້າມາເຖິງ, ບາບກໍໄດ້ຊີວິດອີກຄັ້ງ, ແລະ ຂ້າພຣະເຈົ້າກໍຕາຍ.
[10]ພຣະບັນຍັດຂອງພຣະເຈົ້າຊຶ່ງມີຂຶ້ນເພື່ອທີ່ຈະໄດ້ຊີວິດ ກໍກາຍເປັນຄວາມຕາຍສຳລັບຂ້າພຣະເຈົ້າ.
[11]ເພາະວ່າບາບໄດ້ຖືໂອກາດໂດຍຜ່ານພຣະບັນຍັດຂອງພຣະເຈົ້າ ແລະ ໄດ້ຫລອກລວງຂ້າພຣະເຈົ້າ. ໂດຍຜ່ານພຣະບັນຍັດຂອງພຣະເຈົ້ານັ້ນ
ໄດ້ປະຫານຂ້າພຣະເຈົ້າໃຫ້ຕາຍເສັຽ.[12]ເຫດສະນັ້ນ ກົດບັນຍັດຈຶ່ງເປັນສິ່ງບໍຣິສຸດ, ແລະຂໍ້ບັນຍັດກໍບໍຣິສຸດ, ຍຸດຕິທັມ, ແລະ ດີງາມ.
[13]ຖ້າດັ່ງນັ້ນ ສິ່ງທີ່ດີກັບກາຍເປັນຄວາມຕາຍສຳລັບຂ້າພຣະເຈົ້າບໍ? ຂໍຢ່າໃຫ້ເປັນເຊັ່ນນັ້ນເລີຍ.
ແຕ່ບາບຕ່າງຫາກຄືເພື່ອທີ່ຈະສະແດງໃຫ້ເຫັນວ່າເປັນບາບທີ່ແທ້ຈິງຜ່ານທາງສິ່ງທີ່ດີນັ້ນ, ໄດ້ນຳຄວາມຕາຍມາສູ່ຂ້າພຣະເຈົ້າ.
ສິ່ງນີ້ກໍເພື່ອວ່າໂດຍອາໄສພຣະບັນຍັດນັ້ນ, ບາບກໍປະກົດວ່າຊົ່ວຮ້າຍຫລາຍຂຶ້ນ.
[14]ເພາະພວກເຮົາຮູ້ວ່າກົດບັນຍັດນັ້ນເປັນມາໂດຍຝ່າຍພຣະວິນຍານ, ແຕ່ຂ້າພຣະເຈົ້າເປັນເນື້ອຫນັງທີ່ໄດ້ຖືກຂາຍໄປໃຫ້ເປັນທາດທີ່ຢູ່ໃຕ້ບາບ.
[15]ເພາະວ່າສິ່ງທີ່ຂ້າພຣະເຈົ້າເຮັດ, ຂ້າພຣະເຈົ້າກໍບໍ່ເຂົ້າໃຈຢ່າງແທ້ຈິງ. ເພາະວ່າສິ່ງທີ່ຂ້າພຣະເຈົ້າປາຖນາຈະເຮັດ, ຂ້າພຣະເຈົ້າກໍບໍ່ເຮັດ, ແລະ
ສິ່ງທີ່ຂ້າພຣະເຈົ້າກຽດຊັງນັ້ນ, ຂ້າພຣະເຈົ້າພັດເຮັດ.[16]ແຕ່ຖ້າຂ້າພຣະເຈົ້າເຮັດສິ່ງທີ່ຂ້າພຣະເຈົ້າບໍ່ປາຖນາທີ່ຈະເຮັດ,
ຂ້າພຣະເຈົ້າກໍເຫັນດ້ວຍກັບກົດບັນຍັດວ່າກົດບັນຍັດນັ້ນດີ.
[17]ແຕ່ບັດນີ້ ຂ້າພຣະເຈົ້າຈຶ່ງບໍ່ແມ່ນຜູ້ເຮັດອີກຕໍ່ໄປ, ແຕ່ວ່າບາບທີ່ມີຢູ່ໃນຕົວຂ້າພຣະເຈົ້ານັ້ນເປັນຜູ້ເຮັດ.
[18]ດ້ວຍວ່າຂ້າພຣະເຈົ້າຮູ້ວ່າໃນຕົວຂອງຂ້າພຣະເຈົ້ານັ້ນ, ບໍ່ມີຄວາມດີອັນໃດເລີຍທີ່ຢູ່ໃນເນື້ອຫນັງຂອງຂ້າພຣະເຈົ້າ.
ເພາະວ່າຄວາມປາຖນາທີ່ຈະເຮັດສິ່ງທີ່ດີນັ້ນຂ້າພຣະເຈົ້າກໍມີຢູ່, ແຕ່ຂ້າພຣະເຈົ້າບໍ່ສາມາດທີ່ຈະເຮັດໄດ້.
[19]ດ້ວຍວ່າການດີ ຊຶ່ງຂ້າພຣະເຈົ້າປາຖນາທີ່ຈະເຮັດນັ້ນ ຂ້າພຣະເຈົ້າບໍ່ໄດ້ເຮັດ, ແຕ່ການຊົ່ວຊຶ່ງຂ້າພຣະເຈົ້າບໍ່ໄດ້ປາຖນາທີ່ຈະເຮັດນັ້ນ, ຂ້າພຣະ
ເຈົ້າພັດເຮັດ.[20]ບັດນີ້ ຖ້າຂ້າພຣະເຈົ້າເຮັດໃນສິ່ງທີ່ຂ້າພຣະເຈົ້າບໍ່ປາຖນາທີ່ຈະເຮັດ, ກໍບໍ່ແມ່ນຕົວຂ້າພຣະເຈົ້າເປັນຜູ້ເຮັດອີກຕໍ່ໄປ, ແຕ່ເປັນບາບທີ່
ຢູ່ໃນຕົວຂ້າພຣະເຈົ້າເປັນຜູ້ເຮັດ.[21]ດັ່ງນັ້ນ, ຂ້າພຣະເຈົ້າຈຶ່ງພົບວ່າໃນຕົວຂ້າພຣະເຈົ້ານັ້ນມີກົດຢ່າງຫນຶ່ງຄື ຂ້າພຣະເຈົ້າປາຖນາທີ່ຈະເຮັດຄວາມ
ດີ ແຕ່ຄວາມຊົ່ວນັ້ນກໍຍັງຢູ່ໃນຕົວຂ້າພຣະເຈົ້າ.
[22]ເພາະວ່າສ່ວນເລິກໃນໃຈຂອງຂ້າພຣະເຈົ້ານັ້ນ ຂ້າພຣະເຈົ້າຊື່ນຊົມໃນກົດບັນຍັດຂອງພຣະເຈົ້າ.[23]ແຕ່ຂ້າພຣະເຈົ້າເຫັນມີກົດອີກຢ່າງຫນຶ່ງ
ຢູ່ໃນອະໄວຍະວະຂອງຂ້າພຣະເຈົ້າ. ຊຶ່ງຕໍ່ສູ້ກັບກົດລະບຽບໃຫມ່ໃນຈິດໃຈຂອງຂ້າພຣະເຈົ້າ. ແລະໄດ້ນຳພາໃຫ້ຂ້າພຣະ
ເຈົ້າຢູ່ໃຕ້ກົດແຫ່ງຄວາມບາບຊຶ່ງຢູ່ໃນອະໄວຍະວະຂອງຂ້າພຣະເຈົ້າ.
[24]ຂ້າພຣະເຈົ້າເປັນຄົນຫນ້າສົມເພດຂະຫນາດນັ້ນນໍ! ໃຜຈະຊ່ວຍຂ້າພຣະເຈົ້າໃຫ້ພົ້ນຈາກຮ່າງກາຍແຫ່ງຄວາມຕາຍນີ້ໄດ້?[25]ແຕ່ຂ້າພຣະເຈົ້າ
ຂອບພຣະຄຸນພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າຂອງຂ້າພຣະເຈົ້າ! ດັ່ງນັ້ນ, ດ້ານຈິດໃຈຂອງຂ້າພຣະເຈົ້ານັ້ນ. ຂ້າພຣະ
ເຈົ້າຮັບໃຊ້ກົດຂອງພຣະເຈົ້າ ແຕ່ດ້ານເນື້ອຫນັງນັ້ນຂ້າພຣະເຈົ້າຮັບໃຊ້ກົດແຫ່ງບາບ.


generated on Tue Jun 17 19:01:42 2025

8 1ເພາະສະນັ້ນ ຈຶ່ງບໍ່ມີການລົງໂທດສຳລັບຄົນເຫລົ່ານັ້ນທີ່ຢູ່ໃນພຣະເຢຊູຄຣິດເຈົ້າ.
2ເພາະວ່າກົດຂອງພຣະວິນຍານແຫ່ງຊີວິດໃນພຣະເຢຊູຄຣິດເຈົ້າໄດ້ປົດປ່ອຍໃຫ້ຂ້າພຣະເຈົ້າພົ້ນຈາກກົດແຫ່ງຄວາມບາບ ແລະ ຄວາມຕາຍ.

3ເພາະວ່າສິ່ງທີ່ກົດບັນຍັດເຮັດບໍ່ໄດ້ ເພາະເນື້ອຫນັງເຮັດໃຫ້ອ່ອນກຳລັງນັ້ນ, ພຣະເຈົ້າໄດ້ຊົງເຮັດແລ້ວ.
ພຣະອົງຊົງສົ່ງພຣະບຸດຂອງພຣະອົງລົງມາໃນສະພາບຂອງເນື້ອຫນັງທີ່ຜິດບາບ ເພື່ອເປັນເຄື່ອງບູຊາໄຖ່ບາບ,
ແລະພຣະບຸດຈຶ່ງໄດ້ຊົງລົງໂທດບາບທີ່ຢູ່ໃນເນື້ອຫນັງ. 4ພຣະອົງຊົງໄດ້ເຮັດສິ່ງນີ້ເພື່ອວ່າຂໍ້ກຳນົດຂອງກົດບັນຍັດຈະໄດ້ບັນລຸໃນຕົວພວກເຮົາ,
ຜູ້ທີ່ບໍ່ໄດ້ດຳເນີນຕາມເນື້ອຫນັງ, ແຕ່ຕາມພຣະວິນຍານ. 5ຄົນທັງຫລາຍທີ່ດຳຣົງຊີວິດຕາມເນື້ອຫນັງ ກໍຈະສົນໃຈໃນສິ່ງຂອງທີ່ເປັນເນື້ອຫນັງ,
ແຕ່ຄົນທັງຫລາຍທີ່ດຳຣົງຊີວິດຕາມພຣະວິນຍານບໍຣິສຸດເຈົ້າ ກໍຈະສົນໃຈໃນສິ່ງທີ່ເປັນຂອງພຣະວິນຍານ.
6ເພາະການເອົາໃຈໃສ່ຝ່າຍເນື້ອຫນັງກໍຄືຄວາມຕາຍ, ແຕ່ການເອົາໃຈໃສ່ຝ່າຍພຣະວິນຍານກໍຄືຊີວິດ ແລະ ສັນຕິສຸກ. 7ນີ້ເປັນ
ເພາະວ່າການເອົາໃຈໃສ່ຝ່າຍເນື້ອຫນັງຄືການເປັນສັດຕຣູຕໍ່ພຣະເຈົ້າ, ເພາະນັ້ນບໍ່ໄດ້ຂຶ້ນກັບກົດບັນຍັດຂອງພຣະເຈົ້າ, ແລະບໍ່ສາມາດທີ
ຈະເປັນໄດ້. 8ຄົນເຫລົ່ານັ້ນທີ່ຢູ່ໃນເນື້ອຫນັງບໍ່ສາມາດເຮັດໃຫ້ເປັນທີ່ພໍພຣະທັຍພຣະເຈົ້າໄດ້.
9ເຖິງຢ່າງໃດກໍຕາມ, ຖ້າພຣະວິນຍານຂອງພຣະເຈົ້າສະຖິດຢູ່ໃນພວກທ່ານແລ້ວທ່ານກໍບໍ່ໄດ້ຢູ່ໃນເນື້ອຫນັງ ແຕ່ຢູ່ໃນພຣະວິນຍານ,
ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດ, ຄົນນັ້ນກໍບໍ່ເປັນຂອງພຣະອົງ. 10ຖ້າພຣະຄຣິດສະຖິດຢູ່ໃນທ່ານແລ້ວ,
ຮ່າງກາຍຂອງທ່ານຈະຕາຍໄປໃນເບື້ອງຂອງຄວາມບາບ, ແຕ່ວິນຍານຈະດຳຣົງຢູ່ໃນເບື້ອງຂອງຄວາມຊອບທັມ.
11ຖ້າພຣະວິນຍານຂອງພຣະອົງ ຜູ້ຊົງໃຫ້ພຣະເຢຊູຄຣິດເຈົ້າເປັນຂຶ້ນມາຈາກຕາຍສະຖິດຢູ່ໃນທ່ານທັງຫລາຍ, ພຣະອົງຜູ້ຊົງ
ໃຫ້ພຣະເຢຊູຄຣິດເຈົ້າຂຶ້ນມາຈາກຕາຍນັ້ນຈະຊົງປຣະທານຊີວິດໃຫ້ແກ່ຮ່າງກາຍທີ່ຕ້ອງຕາຍຂອງທ່ານດ້ວຍ ໂດຍ
ທາງພຣະວິນຍານຂອງພຣະອົງ, ຜູ້ສະຖິດຢູ່ໃນທ່ານ.
12ເພາະສະນັ້ນ, ອ້າຍນ້ອງທັງຫລາຍ, ພວກເຮົາເປັນຫນີ້, ແຕ່ບໍ່ແມ່ນເປັນຫນີ້ຝ່າຍເນື້ອຫນັງທີ່ຈະດຳເນີນຊີວິດຕາມເນື້ອຫນັງ.
13ເພາະວ່າຖ້າທ່ານດຳເນີນຊີວິດຕາມເນື້ອຫນັງແລ້ວ, ທ່ານຈະຕ້ອງຕາຍ. ແຕ່ຖ້າໂດຍພຣະວິນຍານ
ທ່ານທຳລາຍການງານຂອງຝ່າຍເນື້ອຫນັງນັ້ນເສັຽ, ທ່ານກໍຈະມີຊີວິດຢູ່.
14ເພາະວ່າຖ້າພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ, ຄົນເຫລົ່ານັ້ນກໍເປັນບຸດຂອງພຣະເຈົ້າ. 15ເພາະວ່າທ່ານບໍ່ໄດ້ຮັບວິນຍານ
ແຫ່ງການເປັນຂ້າທາດອີກເພື່ອໃຫ້ຕົກຢູ່ໃນຄວາມຢ້ານ, ແຕ່ທ່ານໄດ້ຮັບວິນຍານແຫ່ງການເປັນບຸດຂອງພຣະເຈົ້າ,
ເຊິ່ງພວກເຮົາເອີ້ນພຣະເຈົ້າວ່າ "ອັບບາ, ພຣະບິດາ!"
16ພຣະວິນຍານນັ້ນເປັນພະຍານຮ່ວມກັບວິນຍານຂອງພວກຮົາວ່າ ພວກເຮົາເປັນລູກຂອງພຣະເຈົ້າ. 17ຖ້າພວກເຮົາເປັນລູກແລ້ວ,
ພວກເຮົາກໍເປັນຜູ້ສືບທອດດ້ວຍ, ຄືເປັນຜູ້ສືບທອດຈາກພຣະເຈົ້າ. ແລະເປັນຜູ້ສືບທອດຮ່ວມກັບພຣະຄຣິດ,
ຖ້າພວກເຮົາທົນທຸກທໍຣະມານດ້ວຍກັນກັບພຣະອົງຢ່າງແທ້ຈິງເພື່ອທີ່ຈະໄດ້ຮັບສະຫງ່າຣາສີດຽວກັນກັບພຣະອົງດ້ວຍ.
18ເພາະຂ້າພຣະເຈົ້າເຫັນວ່າຄວາມທຸກທໍຣະມານໃນປະຈຸບັນບໍ່ຄູ່ຄວນທີ່ຈະເອົາໄປປຽບທຽບກັບພຣະສີຣິທີ່ຈະຊົງເປີດເຜີຍໃຫ້ແກ່ພວກເຮົາໃນອະນາຄົດ.
19ເພາະວ່າທຸກສິ່ງທີ່ຊົງສ້າງກຳລັງລໍຄອຍດ້ວຍຄວາມຄາດຫວັງຢ່າງເຕັມລົ້ນໃຫ້ບັນດາບຸດທັງຫລາຍຂອງພຣະເຈົ້າໄດ້ຮັບການເປີດເຜີຍ.
20ເພາະວ່າທຸກສິ່ງເຫລົ່ານັ້ນຕ້ອງຢູ່ພາຍໃຕ້ຄວາມອະນິຈັງ. ບໍ່ແມ່ນຕາມໃຈມັກຂອງຕົນເອງ,
ແຕ່ເປັນໄປຕາມຄວາມປະສົງຂອງພຣະເຈົ້າຜູ້ທີ່ຄວບຄຸມຢູ່.
ດ້ວຍມີຄວາມຫມັ້ນໃຈທີ່ແນ່ນອນ 21ວ່າທຸກສິ່ງເຫລົ່ານັ້ນຈະພົ້ນຈາກອຳນາດແຫ່ງການເສື່ອມສະຫລາຍ,
ແລະຈະໄດ້ເຂົ້າໃນເສລີພາບແຫ່ງກຽດຕິຍົດຂອງບັນດາບຸດຂອງພຣະເຈົ້າ. 22ເພາະພວກເຮົາຮູ້ຢູ່ວ່າທຸກສິ່ງທີ່ຊົງສ້າງທັງຫມົດນັ້ນກຳລັງຮ້ອງໄຫ້
ແລະເຈັບປວດຄືກັບແມ່ຍິງໄດ້ເກີດລູກຈົນເຖິງທຸກວັນນີ້.
23ບໍ່ແມ່ນພຽງເທົ່ານັ້ນ ແຕ່ຕົວເຮົາເອງດ້ວຍ, ຜູ້ໄດ້ຮັບຫມາກຜົນທຳອິດແຫ່ງພຣະວິນຍານ ຕົວເຮົາກໍຍັງຄວນຄາງຢູ່ພາຍໃນ,
ລໍຄອຍການທີ່ພຣະເຈົ້າຈະຊົງໃຫ້ເປັນບຸດ, ຄືການທີ່ຈະຊົງໄຖ່ຮ່າງກາຍຂອງພວກເຮົາ. 24ເພາະວ່າໂດຍຄວາມຫມັ້ນໃຈນີ້
ພວກເຮົາໄດ້ຮັບຄວາມພົ້ນ. ແຕ່ວ່າສິ່ງທີ່ພວກເຮົາຫມັ້ນໃຈວ່າຈະເກີດຂຶ້ນນັ້ນ ພວກເຮົາຍັງເບິ່ງບໍ່ເຫັນ,
ໃຜຈະລໍຄອຍດ້ວຍຄວາມຫມັ້ນໃຈໃນສິ່ງທີ່ຕົນເອງເຫັນແລ້ວ? 25ແຕ່ຖ້າພວກເຮົາຫມັ້ນໃຈໃນສິ່ງທີ່ພວກເຮົາຍັງບໍ່ເຫັນນັ້ນແລ້ວ,
ພວກເຮົາກໍຈະລໍຄອຍດ້ວຍຄວາມອົດທົນສຳລັບສິ່ງນັ້ນ.
26ໃນທຳນອງດຽວກັນ, ພຣະວິນຍານກໍຊົງຊ່ວຍເມື່ອເຮົາອ່ອນກຳລັງດ້ວຍ. ເພາະພວກເຮົາບໍ່ຮູ້ວ່າພວກເຮົາຄວນອະທິຖານແນວໃດ,
ແຕ່ພຣະວິນຍານຊົງຊ່ວຍຂໍແທນດ້ວຍການຄຳຄວນຊຶ່ງກ່າວເປັນຖ້ອຍຄຳບໍ່ໄດ້. 27ພຣະອົງຜູ້ຊົງສອດສ່ອງໃຈມະນຸດ
ກໍຊົງຮູ້ຄວາມຫມາຍຂອງພຣະວິນຍານ, ເພາະວ່າພຣະວິນຍານຊົງອະທິຖານເພື່ອຜູ້ທີ່ເຊື່ອຕາມພຣະປະສົງຂອງພຣະເຈົ້າ.
28ພວກເຮົາຮູ້ວ່າສຳລັບຄົນເຫລົ່ານັ້ນທີ່ຮັກພຣະເຈົ້າ, ພຣະອົງຊົງໃຫ້ເຫດການທຸກຢ່າງເກີດຂຶ້ນຮ່ວມກັນເພື່ອສິ່ງຜົນດີ,
ແກ່ຄົນທັງຫລາຍທີ່ໄດ້ຮັບການເອີ້ນຕາມພຣະປະສົງຂອງພຣະອົງ. 29ເພາະວ່າຄົນທັງຫລາຍທີ່ພຣະອົງໄດ້ຮູ້ລ່ວງຫນ້າແລ້ວ,
ພະອົງໄດ້ກຳນົດໄວ້ກ່ອນໃຫ້ເປັນຕາມລັກຊະນະແຫ່ງພຣະບຸດຂອງພຣະອົງ, ເພື່ອພຣະບຸດນັ້ນຈະໄດ້ເປັນບຸດຫົວປີໃນບັນດາອ້າຍນ້ອງທັງຫລາຍ.
30ບັນດາຜູ້ທີ່ພຣະອົງໄດ້ກຳນົດໄວ້ກ່ອນນັ້ນ. ພຣະອົງຊົງເອີ້ນມາດ້ວຍ. ຜູ້ທີ່ພຣະອົງຊົງເອີ້ນມານັ້ນ, ພຣະອົງຊົງໃຫ້ເປັນຄົນຊອບທັມ.
ຜູ້ທີ່ພຣະອົງຊົງໃຫ້ເປັນຄົນຊອບທັມນັ້ນ, ພຣະອົງກໍຍັງໃຫ້ມີພຣະສະຫງ່າຣາສີດ້ວຍ.
31ຖ້າຢ່າງນັ້ນ ພວກເຮົາຈະວ່າຢ່າງໃດກ່ຽວກັບສິ່ງເຫລົ່ານີ້? ຖ້າພຣະເຈົ້າຊົງຢູ່ຝ່າຍພວກເຮົາ, ໃຜຈະຂັດຂວາງໄດ້?
32ພຣະອົງຜູ້ບໍ່ຊົງຫວງພຣະບຸດຂອງພຣະອົງເອງ ແຕ່ປຣະທານພຣະບຸດນັ້ນເພື່ອເປັນຕົວແທນຂອງພວກເຮົາທຸກຄົນ,
ຖ້າເຊັ່ນນັ້ນພຣະອົງຈະບໍ່ປຣະທານສິ່ງສາຣະພັດໃຫ້ພວກເຮົາດ້ວຍກັນກັບພຣະບຸດນັ້ນບໍ?
33ໃຜຈະກ່າວຫາຄົນທີ່ພຣະເຈົ້າໄດ້ຊົງເລືອກໄວ້? ພຣະເຈົ້າຊົງເປັນຜູ້ທີ່ເຮັດໃຫ້ພວກເຂົາເປັນຄົນຊອບທັມແລ້ວ. 34ໃຜຈະເປັນຜູ້ລົງໂທດອີກ?
ພຣະຄຣິດເຈົ້າເປັນຜູ້ຊົງສິ້ນພຣະຊົນເພື່ອພວກເຮົາແລ້ວ, ແລະ ຍິ່ງໄປກວ່ານັ້ນອີກ, ພຣະເຈົ້າຊົງໃຫ້ພຣະອົງເປັນຄືນມາຈາກຕາຍແລ້ວ.
ພຣະອົງຊົງປົກຄອງຮ່ວມກັບພຣະເຈົ້າໃນທີ່ປະທັບອັນມີກຽດ, ແລະ ພຣະອົງກໍເປັນຜູ້ຊົງອະທິຖານຂໍເພື່ອພວກເຮົາດ້ວຍ.

[35]ແລ້ວໃຜຈະເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະຄຣິດເຈົ້າໄດ້? ຈະເປັນຄວາມທຸກ, ຫລືຄວາມຍາກລໍາບາກ, ຫລືການຂົ່ມເຫັງ,
ຫລືຄວາມອຶດຫິວ, ຫລືການເປືອຍກາຍ, ຫລືພັຍອັນຕະຣາຍ, ຫລືການຖືກຄົມດາບບໍ?[36]ຕາມທີ່ມີຂຽນໄວ້ວ່າ,
"ເພາະເຫັນແກ່ປະໂຫຍດຂອງພຣະອົງ. ຂ້າພະອົງທັງຫລາຍຈຶ່ງຖືກຂ້າຫມົດມື້ຈົນຄ່ຳແລະຖືກນັບວ່າເປັນແກະສຳຫລັບເອົາໄປຂ້າ."
[37]ໃນເຫດການທັງຫມົດນີ້ ພວກເຮົາມີຊັຍເຫລືອລົ້ນໂດຍທາງພຣະອົງຜູ້ທີ່ຮັກເຮົາທັງຫລາຍ.[38]ເພາະຂ້າພະເຈົ້າແນ່ໃຈວ່າແມ່ນແຕ່ຄວາມຕາຍ,
ຫລືຊີວິດ, ຫລືບັນດາເທວະດາ, ຫລືຜູ້ປົກຄອງ, ຫລືສິ່ງທີ່ມີຢູ່ໃນປະຈຸບັນນີ້, ຫລືສິ່ງທີ່ຈະມາໃນອະນາຄົດ, ຫລືຣິດເດດທັງຫລາຍ,
[39]ຫລືຄວາມສູງ, ຫລືຄວາມເລິກ, ຫລືສິ່ງອື່ນໆທີ່ຊົງສ້າງແລ້ວນັ້ນ, ຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ,
ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາໄດ້.

 generated on Tue Jun 17 19:01:42 2025

9 [1]ຂ້າພຣະເຈົ້າຈະເວົ້າຄວາມຈິງໃນພຣະຄຣິດເຈົ້າ. ຂ້າພຣະເຈົ້າບໍ່ໄດ້ຕົວະ, ແລະ
ຈິດສຳນຶກຜິດຊອບຂອງຂ້າພຣະເຈົ້າເປັນພະຍານກັບຂ້າພຣະເຈົ້າໂດຍພຣະວິນຍານບໍຣິສຸດເຈົ້າ,[2]ວ່າຂ້າພຣະເຈົ້າມີຄວາມທຸກທໍຣະມານ
ແລະ ຄວາມເຈັບປວດໃນໃຈຢູ່ສະເຫມີ.

[3]ເພາະຂ້າພຣະເຈົ້າປາຖນາໃຫ້ຕົວຂ້າພຣະເຈົ້າເອງຖືກສາບແຊ່ງ ແລະ ຕັດຂາດຈາກພຣະຄຣິດເຈົ້າ ເພາະເຫັນແກ່ອ້າຍນ້ອງຂອງຂ້າພຣະເຈົ້າ,
ຄືເຊື້ອຊາດຂອງຂ້າພຣະເຈົ້າຕາມເນື້ອຫນັງ.[4]ພວກເຂົາເປັນຄົນອິສະຣາເອນ. ເຊິ່ງໄດ້ຮັບສິດໃຫ້ເປັນບຸດຂອງພຣະເຈົ້າ,
ເຫັນພຣະສະຫງ່າຣາສີຂອງພຣະອົງ, ໄດ້ຮັບພັນທະສັນຍາຕ່າງໆ, ແລະຂອງປຣະທານແຫ່ງກົດບັນຍັດ, ລວມທັງການນະມັດສະການພຣະເຈົ້າ
ແລະ ພັນທະສັນຍາຕ່າງໆ.[5]ອີກທັງບັນພະບຸຣຸດກໍເປັນຂອງພວກເຂົາດ້ວຍ ແລະ
ພຣະຄຣິດເຈົ້າກໍມາຈາກພວກເຂົາໂດຍທາງເນື້ອຫນັງຄືພຣະອົງຜູ້ຊຶ່ງເປັນພຣະເຈົ້າເຫນືອສິ່ງທັງປວງ.
ຂໍໃຫ້ພຣະອົງໄດ້ຮັບການສັນຣະເສີນເປັນນິດ. ອາແມນ.
[6]ແຕ່ບໍ່ແມ່ນວ່າພຣະສັນຍາຂອງພຣະເຈົ້າໄດ້ຫລົ້ມເຫລວໄປ. ເພາະວ່າບໍ່ແມ່ນທຸກຄົນທີ່ຢູ່ໃນອິສະຣາເອນນັ້ນ ຈະເປັນຄົນອິສະຣາເອນແທ້ຈິງ.
[7]ແລະບໍ່ແມ່ນທຸກຄົນທີ່ເປັນເຊື້ອສາຍຂອງອັບຣາຮາມ ຈະເປັນບຸດທີ່ແທ້ຈິງຂອງທ່ານ. ແຕ່, "ເຊື້ອສາຍຂອງທ່ານຈະໄດ້ຮັບ
ການເອີ້ນຜ່ານທາງອີຊາກ."
[8]ນັ້ນຄື, ຄົນທີ່ເປັນບຸດຂອງເນື້ອຫນັງບໍ່ແມ່ນບຸດຂອງພຣະເຈົ້າ. ແຕ່ບຸດຂອງພຣະສັນຍານັ້ນຈະຖືວ່າເປັນຜູ້ສືບເຊື້ອສາຍໄດ້.[9]ເພາະພ
ຣະສັນຍາມີດັ່ງນີ້ຄື: "ໃນເວລານີ້ເຮົາຈະມາ, ແລະນາງຊາຣາຈະມີບຸດຊາຍ.”
[10]ບໍ່ພຽງເທົ່ານັ້ນ, ແຕ່ໃນເວລາຕໍ່ມານາງເລເບກາກໍໄດ້ຖືພາກັບຜູ້ຊາຍຄົນຫນຶ່ງດ້ວຍ,
ຄືອີຊາກບັນພະບຸຣຸດຂອງພວກເຮົາ[11]ເພາະວ່າບຸດນັ້ນຍັງບໍ່ໄດ້ເກີດມາ ແລະ ຍັງບໍ່ໄດ້ເຮັດດີຫລືຊົ່ວ, ເພື່ອວ່າພ
ຣະປະສົງຂອງພຣະເຈົ້າຕາມການເລືອກນັ້ນຈະຕັ້ງຫມັ້ນຄົງຢູ່, ບໍ່ແມ່ນເພາະການປະຕິບັດ, ແຕ່ເປັນເພາະພຣະອົງຊົງເອີ້ນ[12]ພຣະອົງຈຶ່ງໄດ້
ກ່າວແກ່ນາງນັ້ນວ່າ, "ອ້າຍຈະບົວລະບັດນ້ອງ."[13]ຕາມທີ່ມີຂຽນໄວ້ວ່າ: “ຢາໂຄບນັ້ນເຮົາຮັກ, ແຕ່ເອຊາວເຮົາຊັງ."
[14]ຖ້າຢ່າງນັ້ນ ພວກເຮົາຈະເວົ້າແນວໃດ? ພຣະເຈົ້າບໍ່ຍຸດຕິທັມ ບໍ? ຂໍຢ່າໃຫ້ເປັນເຊັ່ນນັ້ນເລີຍ.[15]ເພາະພຣະອົງເວົ້າກັບໂມເຊວ່າ, "ເຮົາປະ
ສົງຈະກາຣຸນາໃຜ ເຮົາກໍຈະກາຣຸນາຄົນນັ້ນ, ແລະ ເຮົາຈະເມດຕາໃຜ ເຮົາກໍຈະເມດຕາຕໍ່ຄົນນັ້ນ.”[16]ເພາະສະນັ້ນ, ຈຶ່ງບໍ່ແມ່ນຍ້ອນຄວາມຕັ້ງໃຈ
ຫລື ຄວາມພະຍາຍາມຂອງມະນຸດ, ແຕ່ເປັນເພາະພຣະເຈົ້າ, ຜູ້ຊຶ່ງສຳແດງຄວາມເມດຕາກະຣຸນາ.
[17]ເພາະມີຂໍ້ພຣະຄັມພີທີ່ກ່າວເຖິງຟາໂຣວ່າ, "ເພື່ອຈຸດປະສົງນີ້ເອງຂ້າພຣະເຈົ້າຈຶ່ງໄດ້ຍົກເຈົ້າຂຶ້ນ, ເພື່ອທີ່ເຮົາຈະສຳແດງຣິດທານຸ
ພາບຂອງເຮົາໃຫ້ປະກົດໃນຕົວທ່ານ, ແລະເພື່ອໃຫ້ນາມຊື່ຂອງເຮົາໄດ້ຮັບການປະກາດໄປທົ່ວໂລກ."[18]ດັ່ງນັ້ນ, ພຣະເຈົ້າຊົງກາຣຸນາຄົນ
ທີ່ພຣະອົງຊົງປະສົງຈະກະຣຸນາ, ແລະ ຄົນທີ່ພຣະອົງຊົງປະສົງໃຫ້ມີໃຈແຂງກະດ້າງນັ້ນ, ພຣະອົງກໍຈະຊົງໃຫ້ມີໃຈແຂງກະດ້າງ.
[19]ທ່ານກໍຈະເວົ້າກັບຂ້າພຣະເຈົ້າວ່າ, "ເປັນຫຍັງພຣະອົງຈຶ່ງຍັງຊົງຕິຕຽນ ເພາະໃຜຈະຕໍ່ຕ້ານພຣະປະສົງຂອງພຣະອົງໄດ້?”[20]ໃນ
ທາງກົງກັນຂ້ວາມ, ມະນຸດເອີຍ, ທ່ານເປັນໃຜທີ່ຈະໂຕ້ຕອບກັບພຣະເຈົ້າ? ສິ່ງທີ່ຖືກປັ້ນຈະເວົ້າແກ່ຜູ້ປັ້ນໄດ້ບໍ,? "ເປັນຫຍັງພຣະອົງຈຶ່ງປັ້ນຂ້າພຣະ
ເຈົ້າແບບນີ້?"[21]ສ່ວນຊ່າງປັ້ນຫມໍ້ນັ້ນບໍ່ມີສິດເຫນືອດິນກ້ອນດຽວກັນໃນການທີ່ຈະເອົາມາປັ້ນເປັນພາຊະນະທີ່ໃຊ້ໃນໂອກາດພິເສດອັນຫນຶ່ງ,
ແລະໃຊ້ໃນຊີວິດປະຈຳວັນອີກອັນຫນຶ່ງບໍ?
[22]ແລ້ວຖ້າພຣະຈົ້າ, ຜູ້ທີ່ປະສົງຈະສຳແດງຄວາມໂກດຮ້າຍຂອງພຣະອົງ ແລະ ໃຫ້ຣິດເດດຂອງພຣະອົງປະກົດນັ້ນ, ໄດ້ຊົງອົດກັ້ນພຣະ
ທັຍຢ່າງຫລວງຫລາຍຕໍ່ພາຊະນະແຫ່ງຄວາມໂກດຮ້າຍ ເຊິ່ງໄດ້ກະກຽມໄວ້ສຳຫລັບຄວາມຈິບຫາຍ?[23]ຖ້າພຣະອົງຊົງເຮັດສິ່ງນີ້ເພື່ອທີ່ຈະ
ໄດ້ເຮັດໃຫ້ພຣະສະຫງ່າຣາສີອັນອຸດົມຂອງພຣະອົງປາກົດແກ່ບັນດາພາຊະນະແຫ່ງພຣະເມດຕາ, ຊຶ່ງພຣະອົງໄດ້ກະກຽມໄວ້ກ່ອນສຳ
ລັບກຽດຕິຍົດນັ້ນ?[24]ແລ້ວຖ້າພຣະອົງຊົງເຮັດສິ່ງນີ້ເພື່ອພວກເຮົາ, ຜູ້ທີ່ພຣະອົງຊົງເອີ້ນດ້ວຍ, ບໍ່ແມ່ນຈາກບັນດາຊາວຢິວເທົ່ານັ້ນ, ແຕ່ຈາກບັນ
ດາຄົນຕ່າງຊາດດ້ວຍ.
[25]ດັ່ງທີ່ພຣະອົງກ່າວໄວ້ໃນພຣະຄັມພີ ໂຮເສອາ ວ່າ "ເຮົາຈະເອີ້ນຄົນຂອງເຮົາ ເຊິ່ງໃນອະດີດບໍ່ແມ່ນບຸກຄົນຂອງເຮົາ, ແລະຄົນທີ່ເປັນທີ່ຮັກ
ເຊິ່ງໃນອະດີດບໍ່ໄດ້ເປັນທີ່ຮັກ.[26]ແລະຈະເປັນແບບນັ້ນໃນບ່ອນທີ່ຊົງກ່າວກັບພວກເຂົາວ່າ, 'ພວກທ່ານທັງຫລາຍບໍ່ແມ່ນຄົນຂອງຂ້າພຣະເຈົ້າ,'
ຢູ່ທີ່ນັ້ນເອງ ພວກເຂົາຈະໄດ້ຊື່ວ່າເປັນ 'ບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່."
[27]ເອຊາຢາ ໄດ້ຮ້ອງປະກາດກ່ຽວກັບອິສະຣາເອນວ່າ, "ຖ້າຈຳນວນຂອງບັນດາ
ບຸດແຫ່ງອິສະຣາເອນເພີ່ມຂຶ້ນຢ່າງຫລວງຫລາຍຄືດັ່ງເມັດຊາຍໃນທະເລແລ້ວ, ຜູ້ທີ່ຈະພົ້ນກໍມີຫນ້ອຍ,[28]ເພາະວ່າອົງ
ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ເປັນໄປຕາມພຣະຄຳສັ່ງ. ຂອງພຣະອົງທັງຫມົດຢ່າງໄວວາຢູ່ເທິງແຜ່ນດິນໂລກ,”[29]ແລະຕາມທີ່ ເອຊາຢາ
ໄດ້ກ່າວໄວ້ລ່ວງຫນ້າວ່າ, "ຖ້າອົງພຣະຜູ້ເປັນເຈົ້າຈອມໂຍທາບໍ່ໄດ້ຊົງເຫລືອເຊື້ອສາຍໄວ້ໃຫ້ຂ້າພຣະເຈົ້າເລີຍ, ພວກທ່ານຈະເປັນຄືເມືອງໂຊ
ໂດມ, ແລະ ເມືອງໂກໂມຣາ."
[30]ຖ້າຢ່າງນັ້ນ ພວກທ່ານຈະເວົ້າແນວໃດ? ຈະວ່າພວກຕ່າງຊາດທີ່ບໍ່ໄດ້ສະແຫວງຫາຄວາມຊອບທັມ, ກໍຍັງໄດ້ຮັບຄວາມຊອບທັມ,
ຄືຄວາມຊອບທັມທີ່ເກີດຂຶ້ນໂດຍຄວາມເຊື່ອ.[31]ແຕ່ອິສະຣາເອນເຊິ່ງໄດ້ສະແຫວງຫາກົດບັນຍັດແຫ່ງຄວາມຊອບທັມ, ກໍຍັງບໍ່ໄດ້ບັນລຸ
ຕາມກົດບັນຍັດນັ້ນ.
[32]ເພາະອັນໃດ? ເພາະພວກເຂົາບໍ່ໄດ້ສະແຫວງຫາໂດຍຄວາມເຊື່ອ, ແຕ່ໂດຍການປະຕິບັດ. ພວກເຂົາລົ້ມລົງເທິງກ້ອນຫີນທີ່ເຮັດໃຫ້ສະດຸດນັ້ນ,
[33]ດັ່ງທີ່ມີຂຽນໄວ້ວ່າ, "ເບິ່ງແມ ຂ້າພຣະເຈົ້າວາງຫີນກ້ອນຫນຶ່ງທີ່ຈະເຮັດໃຫ້ສະດຸດ ແລະ ຫີນອີກກ້ອນຫນຶ່ງທີ່ຈະເຮັດໃຫ້ໃຈຮ້າຍໃນຊີໂອນ.
ແຕ່ຜູ້ທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ."


generated on Tue Jun 17 19:01:42 2025

10 [1]ພີ່ນ້ອງທັງຫລາຍ, ຄວາມປາຖນາໃນໃຈຂອງຂ້າພຣະເຈົ້າ ແລະຄຳອ້ອນວອນຂອງຂ້າພຣະເຈົ້າຕໍ່ພຣະຜູ້ເປັນເຈົ້າ, ກໍເພື່ອຄົນເຫລົ່ານັ້ນ
ເພື່ອໃຫ້ພວກທ່ານໄດ້ຮັບຄວາມພົ້ນ.[2]ເພາະຂ້າພຣະເຈົ້າເປັນພະຍານໃຫ້ພວກເຂົາວ່າ ພວກເຂົາມີຄວາມກະຕືລືລົ້ນທີ່ຈະຮັບໃຊ້ພຣະເຈົ້າ,
ແຕ່ບໍ່ແມ່ນຕາມຄວາມຮູ້.[3]ເພາະພວກເຂົາບໍ່ຮູ້ຈັກຄວາມຊອບທັມຂອງພຣະເຈົ້າ, ແລະ ພະຍາຍາມທີ່ຈະຕັ້ງຄວາມຊອບທັມຂອງຕົນເອງຂຶ້ນ.
ພວກເຂົາຈຶ່ງບໍ່ຍອມຢູ່ໃນຄວາມຊອບທັມຂອງພຣະເຈົ້າ.

[4]ເພາະວ່າພຣະຄຣິດເຈົ້າຊຶ່ງເຮັດຕາມກົດບັນຍັດໄດ້ຢ່າງສົມບູນຄົບຖ້ວນທຸກປະການ ເພື່ອໃຫ້ທຸກຄົນທີ່ມີຄວາມເຊື່ອໄດ້ຮັບຄວາມຊອບທັມ.
[5]ເພາະໂມເຊໄດ້ຂຽນເລື່ອງຄວາມຊອບທັມທີ່ມາຈາກກົດບັນຍັດ: "ຄົນທີ່ປະພຶດ
ຕາມຄວາມຊອບທັມແຫ່ງກົດບັນຍັດກໍຈະມີຊີວິດຢູ່ໂດຍຄວາມຊອບທັມນັ້ນ."
[6]ແຕ່ຄວາມຊອບທັມທີ່ມາຈາກຄວາມເຊື່ອວ່າດັ່ງນີ້ຄື, "ຢ່າເວົ້າໃນໃຈຂອງທ່ານເອງວ່າ,
'ໃຜຈະຂຶ້ນໄປເທິງສະຫວັນ?' (ນັ້ນຄືຈະເຊື້ອເຊີນພຣະຄຣິດລົງມາ);[7]ແລະຢ່າເວົ້າວ່າ,
'ໃຜຈະລົງໄປໃນທີ່ຄວາມເລິກ?'" (ນັ້ນຄືຈະເຊື້ອເຊີນພຣະຄຣິດເຈົ້າຂຶ້ນມາຈາກຄວາມຕາຍ).
[8]ແຕ່ຄວາມຊອບທັມວ່າແນວໃດ? "ຖ້ອຍຄຳນັ້ນຢູ່ໃກ້ທ່ານ, ໃນປາກຂອງທ່ານ ແລະ ໃນໃຈຂອງທ່ານ." ນັ້ນຄືຖ້ອຍຄຳແຫ່ງຄວາມເຊື່ອ,
ທີ່ພວກເຮົາທັງຫລາຍໄດ້ປະກາດຢູ່.[9]ເພາະຖ້າວ່າທ່ານຈະຍອມຮັບດ້ວຍປາກຂອງທ່ານວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ,
ແລະເຊື່ອໃນໃຈຂອງທ່ານວ່າພຣະເຈົ້າໄດ້ຊົງໃຫ້ພຣະອົງຄືນມາຈາກຕາຍ, ທ່ານຈະພົ້ນ.[10]ເພາະວ່າການທີ່ມະນຸດເຊື່ອດ້ວຍໃຈ
ກໍນຳໄປສູ່ຄວາມຊອບທັມ, ແລະການທີ່ຍອມຮັບດ້ວຍປາກກໍນຳໄປສູ່ຄວາມພົ້ນ.
[11]ເພາະຂໍ້ພຣະຄັມພີກ່າວວ່າ, "ທຸກຄົນທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ."[12]ເພາະວ່າບໍ່ມີຄວາມແຕກຕ່າງກັນລະຫວ່າງຊາວຢິວ ແລະ
ຊາວກຣີກ. ດ້ວຍວ່າອົງພຣະຜູ້ເປັນເຈົ້າອົງດຽວກັນຊົງເປັນອົງພຣະຜູ້ເປັນເຈົ້າຂອງທຸກຄົນ, ແລະປຣະທານຢ່າງສົມບູນໃຫ້ທຸກຄົນທີ່ຮ້ອງຂໍຕໍ່ພຣະ
ອົງ.[13]ເພາະວ່າທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າຈະພົ້ນ.
[14]ແລ້ວຄົນເຫລົ່ານັ້ນທີ່ຍັງບໍ່ເຊື່ອໃນພຣະອົງ ຈະຮ້ອງຂໍຕໍ່ພຣະອົງໄດ້ແນວໃດ? ແລະຄົນເຫລົ່ານັ້ນທີ່ຍັງບໍ່ໄດ້ຍິນເລື່ອງຂອງພຣະອົງຈະເຊື່ອໃນພຣະ
ອົງໄດ້ແນວໃດ? ແລະເມື່ອບໍ່ມີຜູ້ປະກາດພວກເຂົາຈະໄດ້ຍິນໄດ້ແນວໃດ?[15]ແລະຖ້າບໍ່ມີໃຜສົ່ງພວກເຂົາໄປ, ພວກເຂົາຈະປະກາດໄດ້ແນວໃດ?
ຕາມທີ່ມີຂຽນໄວ້ວ່າ, "ຕີນຂອງຄົນເຫລົ່ານັ້ນທີ່ປະກາດຂ່າວປະເສີດແຫ່ງສິ່ງປະເສີດຊ່າງ ງົດງາມແທ້ນໍ!"
[16]ແຕ່ບໍ່ແມ່ນວ່າພວກເຂົາທຸກຄົນໄດ້ສົນໃຈຟັງຂ່າວປະເສີດນັ້ນ. ເພາະ ເອຊາຢາ ໄດ້ກ່າວວ່າ, "ອົງພຣະຜູ້ເປັນເຈົ້າ, ໃຜຈະໄດ້ເຊື່ອໃນ
ສິ່ງທີ່ລາວໄດ້ຍິນຈາກຂ້າພຣະເຈົ້າ?"[17]ດັ່ງນັ້ນ ຄວາມເຊື່ອເກີດຂຶ້ນຈາກການໄດ້ຍິນ, ແລະການໄດ້ຍິນເກີດຂຶ້ນໂດຍການປະກາດພຣະຄຣິດ.
[18]ແຕ່ຂ້າພຣະເຈົ້າເວົ້າວ່າ, "ພວກເຂົາບໍ່ໄດ້ຍິນບໍ?" ໄດ້ຍິນ, ຢ່າງແນ່ນອນທີ່ສຸດ. "ສຽງຂອງພວກເຂົາໄດ້ກະຈາຍອອກໄປທົ່ວໂລກ,
ແລະຖ້ອຍຄຳຂອງພວກເຂົາກໍໄດ້ປະກາດອອກໄປຈົນເຖິງທີ່ສຸດຂອງປາຍແຜ່ນດິນໂລກ."
[19]ນອກເຫນືອໄປກວ່ານັ້ນ, ຂ້າພຣະເຈົ້າກ່າວອີກວ່າ, "ອິສະຣາເອນບໍ່ຮູ້ບໍ?" ໃນຕອນທຳອິດໂມເຊກ່າວວ່າ, "ຂ້າພຣະ
ເຈົ້າຈະເຮັດໃຫ້ເຈົ້າອິດສາຜູ້ທີ່ບໍ່ໄດ້ເປັນຊົນຊາດ. ເຮົາຈະເຮັດໃຫ້ພວກທ່ານໂກດແຄ້ນ." ດ້ວຍຊົນຊາດທີ່ບໍ່ເຂົ້າໃຈ,
[20]ແລ້ວ ເອຊາຢາ ກໍກ້າທີ່ຈະກ່າວວ່າ, "ຄົນເຫລົ່ານັ້ນທີ່ບໍ່ໄດ້ສະແຫວງຫາຂ້າພຣະເຈົ້າ. ໄດ້ເຫັນຂ້າພຣະເຈົ້າ ຂ້າພຣະເຈົ້າໄດ້ປະກົດຕໍ່ຄົນເຫລົ່າ
ນັ້ນທີ່ບໍ່ໄດ້ຖາມຫາຂ້າພຣະເຈົ້າ."[21]ແຕ່ທ່ານໄດ້ກ່າວແກ່ອິສະລາເອນວ່າ, "ຕະຫລອດທັງວັນ ຂ້າພຣະເຈົ້າໄດ້ເດ່ມືຂອງຂ້າພຣະເຈົ້າອອກໄປຫາຜ
ູ້ຄົນທີ່ບໍ່ເຊື່ອຟັງ ແລະ ດື້ດ້ານ."

 generated on Tue Jun 17 19:01:42 2025

11 1ເມື່ອເປັນເຊັ່ນນັ້ນ, ຂ້າພຣະເຈົ້າຈຶ່ງເວົ້າວ່າ, ພຣະເຈົ້າຊົງປະຕິເສດຄົນຂອງພຣະອົງແລ້ວບໍ? ຂໍຢ່າໃຫ້ເປັນແບບນັ້ນເລີຍ. ເພາະຂ້າພຣະເຈົ້າ
ເອງກໍເປັນຄົນອິສະຣາເອນ, ເຊິ່ງແມ່ນເຊື້ອສາຍຂອງອັບຣາຮາມ, ໃນເຜົ່າເບັນຢາມິນ.2ພຣະເຈົ້າບໍ່ຊົງປະຕິເສດຄົນຂອງພຣະອົງ, ທີ່ພຣະອົງ
ຊົງເລືອກໄວ້ກ່ອນແລ້ວ. ທ່ານບໍ່ຮູ້ວ່າພຣະຄັມພີກ່າວເຖິງ ເອລີຢາ ວ່າແນວໃດ, ທ່ານໄດ້ກ່າວຫາຄົນອິສະຣາເອນຕໍ່ພຣະເຈົ້າວ່າ?
3"ອົງພຣະຜູ້ເປັນເຈົ້າ, ພວກເຂົາໄດ້ຂ້າບັນດາຜູ້ທຳນວາຍຂອງພຣະອົງ, ພວກເຂົາທຳລາຍແທ່ນບູຊາຂອງພຣະອົງ. ເຫລືອຂ້າພຣະ
ອົງພຽງຄົນດຽວ, ແລະພວກເຂົາຊອກຫາວິທີທີ່ຈະເອົາຊີວິດຂອງຂ້າພຣະອົງ."

4ແຕ່ພຣະເຈົ້າຊົງຕອບລາວວ່າແນວໃດ? "ເຮົາໄດ້ສະຫງວນຄົນໄວ້ສຳລັບເຮົາເຈັດພັນຄົນ ເຊິ່ງເປັນຜູ້ທີ່ບໍ່ໄດ້ກາບ
ໄຫວ້ພຣະບາອານ.”5ເຖິງຢ່າງນັ້ນກໍຕາມ, ໃນປະຈຸບັນນີ້, ຍັງມີຄົນຈຳນວນຫນຶ່ງທີ່ເຫລືອຢູ່ເພາະພຣະເຈົ້າໄດ້ຊົງເລືອກໄວ້ໂດຍພຣະຄຸນ.
6ແຕ່ຖ້າເປັນໂດຍພຣະຄຸນ, ກໍບໍ່ໄດ້ເປັນໂດຍການປະຕິບັດອີກຕໍ່ໄປ. ຖ້າບໍ່ດັ່ງນັ້ນ ພຣະຄຸນກໍຈະບໍ່ແມ່ນພຣະຄຸນອີກຕໍ່ໄປ.7ຖ້າຢ່າງນັ້ນຈະວ່າແນວ
ໃດ? ສິ່ງທີ່ຄົນອິສະຣາເອນສະແຫວງຫານັ້ນ, ພວກເຂົາບໍ່ໄດ້ຮັບ, ແຕ່ຄົນທີ່ພຣະເຈົ້າໄດ້ຊົງເລືອກນັ້ນເປັນຜູ້ໄດ້ຮັບ, ແລະຄົນອື່ນທີ່ເຫລືອກໍມີ
ໃຈແຂງກະດ້າງໄປ.8ຕາມທີ່ມີການຂຽນໄວ້ວ່າ: “ພຣະເຈົ້າຈະປຣະທານໃຈທີ່ອ່ອນເພັຽ, ຕາທີ່ເບິ່ງບໍ່ເຫັນ, ແລະຫູທີ່ບໍ່ໄດ້ຍິນແກ່ພວກເຂົາ,
ຈົນເຖິງທຸກວັນນີ້."
9ແລະດາວິດກ່າວວ່າ, "ໃຫ້ໂຕະອາຫານຂອງເຂົາເປັນຕາຫນ່າງກັບດັກທ່ອນຫີນທີ່ເຮັດໃຫ້ສະດຸດ, ແລະເປັນສິ່ງທີ່ຕອບແທນພວກເຂົາ.
10ໃຫ້ຕາຂອງພວກເຂົາມືດໄປເພື່ອທີ່ຈະໄດ້ເບິ່ງບໍ່ເຫັນ, ແລະໃຫ້ຫລັງຂອງພວກເຂົາກົ້ງລົງຢູ່ສະເຫມີ."
11ຂ້າພຣະເຈົ້າເວົ້າວ່າ, "ພວກເຂົາສະດຸດຈົນລົ້ມລົງບໍ?" ຂໍຢ່າໃຫ້ເປັນແບບນັ້ນເລີຍ. ແຕ່, ຄວາມຫລົ້ມເຫລວຂອງພວກເຂົານັ້ນ, ເປັນ
ເຫດໃຫ້ຄວາມພົ້ນມາເຖິງພວກຕ່າງຊາດ, ເພື່ອທີ່ຈະເຮັດໃຫ້ພວກເຂົາອິດສາ.12ຖ້າຄວາມຫລົ້ມເຫລວຂອງພວກເຂົານັ້ນເປັນ
ເຫດໃຫ້ທົ່ວໂລກໄດ້ຮັບຄວາມສົມບູນ, ແລະຖ້າຄວາມພ່າຍແພ້ຂອງພວກເຂົາ ເປັນເຫດໃຫ້ພວກຕ່າງຊາດໄດ້ຮັບຄວາມສົມບູນແລ້ວ,
ຖ້າພວກເຂົາທັງຫມົດໄດ້ເຂົ້າຮ່ວມດ້ວຍ ຈະດີຍິ່ງກວ່ານັ້ນອີກເທົ່າໃດຫນໍ?
13ບັດນີ້ ຂ້າພຣະເຈົ້າຂໍກ່າວແກ່ພວກທ່ານທີ່ເປັນຄົນຕ່າງຊາດ, ຕາບເທົ່າທີ່ຂ້າພຣະເຈົ້າເປັນອັກຄະສາວົກມາຍັງຄົນຕ່າງຊາດນັ້ນ, ຂ້າພຣະ
ເຈົ້າຍົກຍ້ອງພັນທະກິດຂອງຂ້າພຣະເຈົ້າ.14ບາງທີຂ້າພຣະເຈົ້າອາດເຮັດໃຫ້ພີ່ນ້ອງຮ່ວມຊາດຂອງຂ້າພຣະເຈົ້າອິດສາ. ບາງທີພວກເຮົາອາດຈະ
ໄດ້ຊ່ວຍບາງຄົນໃຫ້ພົ້ນ.
15ເພາະວ່າຖ້າການທີ່ພວກຊາວອິສະຣາເອນຖືກປະຕິເສດ ເປັນເຫດໃຫ້ຄົນທັງໂລກກັບມາຄືນດີກັບພຣະເຈົ້າ, ການທີ່ພຣະອົງຊົງຮັບ
ເຂົາກັບມາອີກຄັ້ງນັ້ນ ຄືກັບວ່າເຂົາໄດ້ຕາຍໄປແລ້ວ ແລະກັບມາມີຊີວິດອີກຄັ້ງ?16ຖ້າໄດ້ມີການສະຫງວນແປ້ງດິບໄວ້ເພື່ອຖວາຍຜົນທຳອິດ,
ແປ້ງດິບທັງຫມົດກໍເປັນຂອງພຣະອົງດ້ວຍ. ແລະຖ້າໄດ້ມີການສະຫງວນຮາກໄວ້ເພື່ອຖວາຍແດ່ພຣະເຈົ້າ, ກິ່ງທັງຫມົດກໍເປັນຂອງພຣະອົງດ້ວຍ.
17ແຕ່ຖ້າບາງກິ່ງຖືກຫັກອອກແລ້ວ, ແລະຖ້າພຣະເຈົ້າຊົງນຳທ່ານ, ທີ່ເປັນກິ່ງຫມາກກອກປ່າມາຕໍ່ໄວ້ແທນກິ່ງເຫລົ່ານັ້ນ,
ແລະຖ້າທ່ານໄດ້ຮັບນ້ຳລ້ຽງຈາກຮາກຕົ້ນຫມາກກອກທີ່ອຸດົມສົມບູນນັ້ນຮ່ວມກັບກິ່ງອື່ນໆແລ້ວ,18ກໍຢ່າອວດດີຕໍ່ກິ່ງເຫລົ່ານັ້ນ. ແຕ່ຖ້າທ່ານອວດດີ,
ຢ່າລືມວ່າທ່ານບໍ່ໄດ້ລ້ຽງຮາກນັ້ນ, ແຕ່ຮາກຕ່າງຫາກທີ່ລ້ຽງທ່ານ.
19ທ່ານອາດຈະເວົ້າວ່າ, "ກິ່ງເຫລົ່ານັ້ນຖືກຫັກອອກເພື່ອຂ້າພຣະເຈົ້າຈະໄດ້ຖືກຕໍ່ເຂົ້າແທນທີ່."20ຖືກແລ້ວ. ພວກເຂົາຖືກຫັກອອກກໍເພາະບໍ່ເຊື່ອ,
ແຕ່ທີ່ທ່ານຍຶດຫມັ້ນຢູ່ຢ່າງຫມັ້ນຄົງໄດ້ເພາະຄວາມເຊື່ອຂອງທ່ານເທົ່ານັ້ນ. ຢ່າໂອ້ອວດໄປ, ແຕ່ຈົ່ງຢ້ານກົວ.
21ເພາະວ່າຖ້າພຣະເຈົ້າບໍ່ໄດ້ລະເວັ້ນກິ່ງເກົ່າຈາກທັມະຊາດເຫລົ່ານັ້ນ, ພຣະອົງກໍຈະບໍ່ລະເວັ້ນທ່ານເຊັ່ນກັນ.
22ເຫດສະນັ້ນ, ຈົ່ງພິຈາຣະນາເບິ່ງ, ທັງຄວາມເມດຕາ ແລະ ຄວາມເຄັ່ງຄັດຂອງພຣະເຈົ້າ. ແຕ່ອີກດ້ານຫນຶ່ງ,
ພຣະອົງຊົງເຄັ່ງຄັດກັບພວກຢິວທີ່ຫລົງຜິດໄປ. ແຕ່ໃນອີກດ້ານຫນຶ່ງ, ພຣະອົງຊົງເມດຕາຕໍ່ທ່ານ,
ຖ້າທ່ານຈະດຳຣົງຊີວິດຢູ່ໃນພຣະເມດຕາຂອງພຣະອົງ, ຖ້າບໍ່ດັ່ງນັ້ນ ທ່ານກໍຈະຖືກຕັດອອກດ້ວຍ.
23ອີກປະການຫນຶ່ງຄື, ຖ້າພວກເຂົາບໍ່ຍອມຢູ່ໃນຄວາມບໍ່ເຊື່ອຕໍ່ໄປ, ພວກເຂົາກໍຈະໄດ້ຮັບການເຊື່ອມຕໍ່ກັບເຂົ້າໄປໃຫມ່.
ເພາະວ່າພຣະເຈົ້າສາມາດເຊື່ອມຕໍ່ກັບພວກເຂົາອີກຄັ້ງໄດ້.24ເພາະວ່າຖ້າພຣະເຈົ້າຊົງຕັດທ່ານອອກຈາກຕົ້ນຫມາກກອກເທດທັມະຊາດ,
ແລະຊົງນຳມາຕໍ່ກັບຕົ້ນຫມາກກອກພັນດີ, ເຊິ່ງຜິດທັມະຊາດແລ້ວ ການທີ່ຈະເອົາພວກຢິວເຫລົ່ານັ້ນ, ເຊິ່ງເປັນງ່າເດີມຕາມທັມະຊາດເຂົ້າມາຕໍ່
ກັບເຂົ້າໄປໃນຕົ້ນຂອງມັນເອງ, ຈະເປັນເລື່ອງງ່າຍກ່ວານັ້ນຫລາຍເທົ່າໃດ?
25ພີ່ນ້ອງທັງຫລາຍ, ຂ້າພຣະເຈົ້າຢາກໃຫ້ທ່ານເຂົ້າໃຈຂໍ້ຄວາມອັນເລິກລັບນີ້, ເພື່ອທີ່ວ່າທ່ານຈະໄດ້ບໍ່ອວດຮູ້ຄວາມເລິກລັບນີ້ ຄືສ່ວນຫນຶ່ງ
ຂອງຊົນຊາດອິສະຣາເອນ, ຈະມີໃຈແຂງກະດ້າງໄປຈົນກ່ວາຄົນຕ່າງຊາດຈະໄດ້ເຂົ້າມາຄົບຕາມຈຳນວນ.
26ເມື່ອເປັນແນວນັ້ນ ຊົນຊາດອິສະຣາເອນທັງຫມົດກໍຈະໄດ້ຮັບຄວາມພົ້ນ, ຕາມທີ່ມີຂຽນໄວ້ວ່າ: “ພຣະຜູ້ຊ່ວຍໃຫ້ພົ້ນຈະສະເດັດມາຈາກພູ
ເຂົາຊີໂອນ. ພຣະອົງຈະກຳຈັດຄວາມຊົ່ວອອກໄປຈາກຢາໂຄບ,27ແລະນີ້ຈະເປັນພັນທະສັນຍາຂອງເຮົາກັບພວກເຂົາ,
ເມື່ອເຮົາຈະໃຫ້ອະພັຍໂທດບາບຂອງພວກເຂົາ.”
28ໃນອີກດ້ານຫນຶ່ງ ເລື່ອງຂ່າວປະເສີດນັ້ນ, ພວກເຂົາກໍເປັນສັດຕຣູຂອງພຣະເຈົ້າເພື່ອປະໂຫຍດຂອງພວກທ່ານ.
ແຕ່ໃນອີກດ້ານຫນຶ່ງຕາມການຊົງເລືອກຂອງພຣະເຈົ້ານັ້ນ, ພວກເຂົາເປັນທີ່ຮັກເນື່ອງຈາກບັນພະບຸຣຸດທັງຫລາຍ.29ເພາະວ່າຂອງປຣະທານ ແລະ
ການຊົງເອີ້ນຂອງພຣະເຈົ້ານັ້ນບໍ່ມີມື້ປ່ຽນແປງ.
30ໃນອະດີດພວກທ່ານບໍ່ໄດ້ເຊື່ອຟັງພຣະເຈົ້າ, ແຕ່ດຽວນີ້ໄດ້ຮັບພຣະເມດຕາເພາະຄວາມບໍ່ເຊື່ອຟັງຂອງພວກເຂົາ.31ໃນທຳນອງດຽວກັນ,
ບັດນີ້ຊາວຢິວເຫລົ່ານັ້ນກໍບໍ່ໄດ້ເຊື່ອຟັງ. ຜົນກໍຄືພວກເຂົາຈະໄດ້ຮັບພຣະເມດຕາໂດຍພຣະເມດຕາທີ່ໄດ້ຊົງສຳແດງແກ່ພວກທ່ານ.
32ເພາະວ່າພຣະເຈົ້າໄດ້ກຳນົດໃຫ້ມະນຸດທຸກຄົນຢູ່ໃນຄວາມບໍ່ເຊື່ອຟັງ,
ເພື່ອທີ່ວ່າພຣະອົງຈະໄດ້ສຳແດງພຣະເມດຕາແກ່ພວກເຂົາທັງຫລາຍທຸກຄົນ.
33ໂອ້, ພຣະສະຕິປັນຍາ ແລະ ຄວາມຮອບຮູ້ຂອງພຣະເຈົ້ານັ້ນເລິກເຊິ່ງຫລາຍປານໃດ! ຂໍ້ຕັດສິນຂອງພຣະອົງນັ້ນກໍເຫລືອທີ່ຈະເຂົ້າໃຈໄດ້,
ແລະທາງຂອງພຣະອົງກໍເຫລືອທີ່ຈະຄົ້ນພົບໄດ້!34ເພາະວ່າຜູ້ໃດຮູ້ຈັກຈິດໃຈຂອງອົງພຣະຜູ້ເປັນເຈົ້າໄດ້
ຫລືໃຜສາມາດເປັນທີ່ປຶກສາຂອງພຣະອົງໄດ້?


generated on Tue Jun 17 19:01:42 2025

[35]ຫລືຜູ້ໃດໄດ້ມອບຫຍັງແດ່ແກ່ພຣະເຈົ້າກ່ອນ,
ເພື່ອທີ່ພຣະອົງຈະຊົງຕອບແທນເຂົາ?”[36]ເພາະວ່າທຸກສິ່ງທຸກຢ່າງທັງຫມົດມາຈາກພຣະອົງໂດຍພຣະອົງ ແລະ ເພື່ອພຣະອົງ.
ຂໍພຣະສີຣິຈົ່ງມີແດ່ພຣະອົງສືບໄປເປັນນິດ. ອາແມນ.

 generated on Tue Jun 17 19:01:42 2025

12 1ດ້ວຍເຫດນີ້, ພີ່ນ້ອງທັງຫລາຍ, ໂດຍເຫັນແກ່ພຣະເມດຕາຂອງພຣະເຈົ້າ, ຂ້າພຣະເຈົ້າຂໍອ້ອນວອນທ່ານທັງຫລາຍ,
ໃຫ້ຖວາຍຕົວຂອງພວກທ່ານແດ່ພຣະຜູ້ເປັນເຈົ້າ. ເພື່ອເປັນເຄື່ອງບູຊາທີ່ມີຊີວິດບໍຣິສຸດ ແລະເປັນທີ່ພໍພຣະທັຍພຣະເຈົ້າ
ນີ້ແມ່ນການຮັບໃຊ້ທີ່ເຫມາະສົມຂອງທ່ານ. 2ຢ່າປະພຶດຕາມຢ່າງຄົນໃນໂລກນີ້, ແຕ່ຈົ່ງຮັບການປ່ຽນແປງຈິດໃຈໃຫມ່.
ເພື່ອທີ່ວ່າຕົວຂອງທ່ານຈະໄດ້ປ່ຽນແປງໄປດ້ວຍ ເພື່ອທ່ານຈະໄດ້ຮູ້ວ່າສິ່ງໃດດີ, ສິ່ງໃດເປັນທີ່ພໍພຣະທັຍ,
ແລະສິ່ງໃດເປັນພຣະປະສົງອັນສົມບູນແບບຂອງພຣະເຈົ້າ.

3ຂ້າພຣະເຈົ້າຂໍກ່າວໂດຍພຣະຄຸນທີ່ປຣະທານແກ່ຂ້າພຣະເຈົ້າວ່າ. ທຸກຄົນໃນພວກທ່ານບໍ່ຄວນຄິດຖືຕົວເກີນກວ່າທີ່ຕົນຄວນຈະຄິດ. ແຕ່ຈົ່ງ,
ຄິດຢ່າງສະຫລາດຮອບຄອບໃຫ້ສົມກັບຂະຫນາດ, ຂອງຄວາມເຊື່ອທີ່ພຣະເຈົ້າໄດ້ປຣະທານໃຫ້ແກ່ທ່ານແຕ່ລະຄົນ.
4ເພາະວ່າພວກເຮົາມີອະໄວຍະວະຫລາຍຢ່າງໃນຮ່າງກາຍດຽວນີ້, ແຕ່ບໍ່ແມ່ນອະໄວຍະວະທັງຫມົດມີຫນ້າທີ່ຄືກັນ. 5ໃນທໍານອງດຽວກັນ,
ພວກເຮົາຫຼາຍຄົນກໍເປັນຮ່າງກາຍດຽວໃນພຣະຄຣິດເຈົ້າ, ແລະຕ່າງກໍເປັນອະໄວຍະວະຂອງກັນແລະກັນຢ່າງນັ້ນ.
6ພວກເຮົາທຸກຄົນມີຂອງປຣະທານທີ່ແຕກຕ່າງກັນ ຕາມພຣະຄຸນທີ່ໄດ້ປຣະທານໃຫ້ແກ່ພວກເຮົາ.
ຖ້າຂອງປຣະທານຂອງຄົນຫນຶ່ງຄືການເຜີຍພຣະທັມ, ກໍຈົ່ງເຮັດຕາມສັດສ່ວນຄວາມເຊື່ອຂອງເຂົາ.
7ຖ້າຂອງປຣະທານຂອງຄົນຫນຶ່ງຄືການຮັບໃຊ້, ກໍໃຫ້ເຂົາຮັບໃຊ້. ຖ້າຄົນຫນຶ່ງມີຂອງປຣະທານແຫ່ງການສິດສອນ, ກໍໃຫ້ເຂົາສອນ.
8ຖ້າຂອງປຣະທານຂອງຄົນຫນຶ່ງຄືການຫນູນໃຈ, ກໍໃຫ້ເຂົາຫນູນໃຈ. ຖ້າຂອງປຣະທານຂອງຄົນຫນຶ່ງຄືການໃຫ້, ກໍຈົ່ງໃຫ້ດ້ວຍໃຈກ້ວາງຂວາງ.
ຖ້າຂອງປຣະທານຂອງຄົນຫນຶ່ງຄືການນໍາ, ກໍຈົ່ງນໍາດ້ວຍຄວາມເອົາໃຈໃສ່. ຖ້າຂອງປຣະທານຂອງຄົນຫນຶ່ງຄືການສະແດງຄວາມເມດຕາ,
ກໍຈົ່ງເຮັດດ້ວຍໃຈຍິນດີ.
9ຂໍໃຫ້ຄວາມຮັກປາສະຈາກຄວາມເສແສ້ງ. ຈົ່ງກຽດຊັງສິ່ງທີ່ຊົ່ວ; ຈົ່ງຍຶດຫມັ້ນໃນສິ່ງທີ່ດີ. 10ໃນເລື່ອງຄວາມຮັກແບບພີ່ນ້ອງນັ້ນ,
ຈົ່ງຮັກແພງເຊິ່ງກັນແລະກັນ. ໃນເລື່ອງກຽດນັ້ນ, ຈົ່ງໃຫ້ກຽດເຊິ່ງກັນແລະກັນ.
11ໃນເລື່ອງຄວາມດຸຫມັ່ນນັ້ນ, ຈົ່ງຢ່າລັງເລໃຈ. ໃນເລື່ອງພຣະວິນຍານນັ້ນ, ຈົ່ງມີໃຈກະຕືລືລົ້ນ. ໃນເລື່ອງຂອງອົງພຣະຜູ້ເປັນເຈົ້ານັ້ນ,
ຈົ່ງຮັບໃຊ້ພຣະອົງ. 12ຈົ່ງຊື່ນຊົມຍິນດີໃນຄວາມຫມັ້ນໃຈທີ່ທ່ານມີຕໍ່ອະນາຄົດ. ຈົ່ງອົດທົນໃນຄວາມຍາກລໍາບາກຂອງທ່ານ. ຈົ່ງສືບຕໍ່ອະທິຖານ.
13ຈົ່ງຊ່ວຍເຫລືອຜູ້ທີ່ເຊື່ອໃນເວລາທີ່ເຂົາເຈົ້າຕ້ອງການ. ພະຍາຍາມຕ້ອນຮັບຄົນແປກຫນ້າໃຫ້ດີທີ່ສຸດ.
14ຈົ່ງອວຍພອນຄົນທີ່ຂົ່ມເຫັງທ່ານ; ຈົ່ງອວຍພອນ ແລະ ຢ່າດ່າກັນເລີຍ. 15ຈົ່ງຊື່ນຊົມຍິນດີກັບຄົນເຫລົ່ານັ້ນທີ່ຊື່ນຊົມຍິນດີ;
ຈົ່ງຮ້ອງໄຫ້ກັບຄົນເຫລົ່ານັ້ນທີ່ຮ້ອງໄຫ້. 16ຈົ່ງເປັນນ້ໍາຫນຶ່ງໃຈດຽວກັນ. ຢ່າຄິດໃນທາງທີ່ໂອ້ອວດ, ແຕ່ຈົ່ງຍອມຮັບເອົາຄົນທີ່ຕ່ໍາຕ້ອຍກວ່າ.
ຢ່າຄິດວ່າຕົນເອງສະຫລາດ.
17ຢ່າເຮັດສິ່ງທີ່ຊົ່ວຮ້າຍຕອບແທນຕໍ່ຜູ້ໃດເລີຍ. ຈົ່ງເຮັດສິ່ງທີ່ດີໃນສາຍຕາຂອງທຸກຄົນ. 18ຖ້າເປັນໄປໄດ້, ໃນຂອບເຂດເລື່ອງນີ້ຂຶ້ນຢູ່ກັບທ່ານ.
ມີຊີວິດສະຫງົບສຸກກັບທຸກໆຄົນ.
19ທ່ານຜູ້ເປັນທີ່ຮັກຂອງຂ້າພຣະເຈົ້າ, ຢ່າແກ້ແຄ້ນເອງເລີຍ, ແຕ່ຈົ່ງມອບໄວ້ໃຫ້ກັບພຣະເຈົ້າເປັນຜູ້ຊົງພິພາກສາລົງໂທດ. ເພາະມີຂຽນໄວ້ວ່າ,
"ອົງພຣະຜູ້ເປັນເຈົ້າກ່າວວ່າ."'ການແກ້ແຄ້ນເປັນທຸລະຂອງເຮົາ; ເຮົາຈະຕອບແທນເອງ,' 20ແຕ່ຖ້າສັດຕຣູຂອງທ່ານຫິວ, ຈົ່ງໃຫ້ອາຫານລາວກິນ.
ຖ້າລາວຫິວນ້ໍາ, ຈົ່ງໃຫ້ນ້ໍາລາວດື່ມ. ເພາະວ່າຖ້າທ່ານເຮັດແບບນີ້
ທ່ານຈະສຸມຖ່ານໄຟທີ່ລຸກຢູ່ໄວ້ເທິງຫົວຂອງລາວ." 21ຢ່າໃຫ້ຄວາມຊົ່ວຮ້າຍເອົາຊະນະທ່ານໄດ້, ແຕ່ຈົ່ງເອົາຊະນະຄວາມຊົ່ວດ້ວຍຄວາມດີ.

 generated on Tue Jun 17 19:01:42 2025

13 [1]ໃຫ້ທຸກຄົນຍອມເຊື່ອຟັງຜູ້ທີ່ມີອຳນາດປົກຄອງ, ເພາະວ່າບໍ່ມີອຳນາດໃດເລີຍທີ່ບໍ່ໄດ້ມາຈາກພຣະເຈົ້າ.
ແລະອຳນາດທີ່ມີຢູ່ນັ້ນໄດ້ຮັບການແຕ່ງຕັ້ງໂດຍພຣະເຈົ້າ.[2]ດັ່ງນັ້ນ ຜູ້ທີ່ຕໍ່ຕ້ານອຳນາດນັ້ນກໍບໍ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າ;
ແລະຜູ້ທີ່ຕໍ່ຕ້ານນັ້ນຈະຖືກພິພາກສາລົງໂທດ.

[3]ເພາະວ່າຜູ້ທີ່ປົກຄອງນັ້ນບໍ່ເປັນຕາຢ້ານສຳຫລັບຄົນທີ່ເຮັດຄວາມດີ, ແຕ່ເປັນຕາຢ້ານສຳຫລັບຄົນທີ່ເຮັດຄວາມຊົ່ວ.
ທ່ານຕ້ອງການຈະບໍ່ຮູ້ສຶກຢ້ານຜູ້ມີອຳນາດບໍ? ຈົ່ງເຮັດໃນສິ່ງທີ່ດີ, ແລະທ່ານຈະໄດ້ຮັບການຍົກຍ້ອງຈາກຜູ້ມີອຳນາດນັ້ນ.
[4]ເພາະວ່າເຂົາເປັນຜູ້ຮັບໃຊ້ຂອງພຣະເຈົ້າເພື່ອໃຫ້ທ່ານໄດ້ຜົນປະໂຫຍດ. ແຕ່ຖ້າທ່ານເຮັດສິ່ງທີ່ຊົ່ວ, ຈົ່ງຢ້ານເຖີດ.
ເພາະວ່າເຂົາບໍ່ໄດ້ຖືດາບໄວ້ລ້າ ໆ. ແຕ່ເຂົາເປັນຜູ້ຮັບໃຊ້ຂອງພຣະເຈົ້າ, ເຊິ່ງກໍຄືຜູ້ແກ້ແຄ້ນໂທດບາບທີ່ມີໃນທຸກຄົນທີ່ເຮັດຄວາມຊົ່ວ.[5]ດັ່ງນັ້ນ
ທ່ານຕ້ອງເຊື່ອຟັງຜູ້ປົກຄອງ, ບໍ່ແມ່ນຍ້ອນຢ້ານການລົງໂທດພຽງຢ່າງດຽວ, ແຕ່ຍ້ອນຈິດສຳນຶກຜິດແລະຊອບດ້ວຍ.
[6]ດ້ວຍເຫດນີ້ ທ່ານຈຶ່ງຕ້ອງໄດ້ເສັຽພາສີດ້ວຍ. ເພາະວ່າຜູ້ມີອຳນາດນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ, ທີ່ເຮັດຫນ້າທີ່ນີ້ຢ່າງຕໍ່ເນື່ອງ.
[7]ຈົ່ງຈ່າຍໃຫ້ແກ່ທຸກຄົນຕາມທີ່ທ່ານຕ້ອງຈ່າຍໃຫ້ພວກເຂົາ: ຄືພາສີແກ່ຄົນທີ່ຕ້ອງໄດ້ຮັບພາສີ; ຄ່າທຳນຽມແກ່ຄົນທີ່ຕ້ອງໄດ້ຮັບຄ່າທຳນຽມ;
ຄວາມຢ້ານກົວແກ່ຄົນທີ່ຕ້ອງໄດ້ຮັບຄວາມຢ້ານກົວ; ໃຫ້ກຽດແກ່ຄົນທີ່ຕ້ອງໄດ້ຮັບກຽດ.
[8]ຢ່າເປັນຫນີ້ສິ່ງໃດຕໍ່ໃຜເລີຍ, ນອກຈາກຄວາມຮັກຕໍ່ກັນ ແລະກັນ. ເພາະວ່າຜູ້ທີ່ຮັກເພື່ອນບ້ານໄດ້ເຮັດຕາມກົດບັນຍັດຢ່າງຄົບຖ້ວນແລ້ວ.
[9]ຂໍ້ທີ່ວ່າ "ຢ່າຫລິ້ນຊູ້, ຢ່າຂ້າຄົນ, ຢ່າລັກຊັບ, ຢ່າໂລບ," ແລະຖ້າມີພຣະບັນຍັດອື່ນໆນຳແລ້ວ, ກໍຈະສະຫລຸບໄດ້ໃນປະໂຫຍກນີ້ຄື:
“ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ.”[10]ຄວາມຮັກບໍ່ເປັນອັນຕະຣາຍຕໍ່ເພື່ອນບ້ານຂອງເຂົາ; ດັ່ງນັ້ນ,
ຄວາມຮັກຈຶ່ງເປັນສິ່ງທີ່ເຮັດໃຫ້ກົດບັນຍັດສົມບູນ.
[11]ດ້ວຍເຫດນີ້, ທ່ານຄວນຮູ້ເວລາ, ວ່ານີ້ເປັນເວລາທີ່ທ່ານຈະຕ້ອງຕື່ນຈາກຫລັບນອນແລ້ວ.
ເພາະວ່າຄວາມພົ້ນຂອງພວກເຮົາໄດ້ເຂົ້າມາໃກ້ກວ່າຕອນທີ່ພວກເຮົາເລີ່ມເຊື່ອແລ້ວ.[12]ເວລານີ້ເດິກຫລາຍແລ້ວ,
ແລະຕອນເຊົ້າກຳລັງໃກ້ເຂົ້າມາ. ດັ່ງນັ້ນ ໃຫ້ພວກເຮົາປະຖິ້ມການງານແຫ່ງຄວາມມືດ, ແລະ ໃສ່ເສື້ອເກາະແຫ່ງຄວາມສະຫວ່າງ.
[13]ໃຫ້ພວກເຮົາດຳເນີນຊີວິດຢ່າງເຫມາະສົມ, ເຫມືອນໃນເວລາກາງເວັນ, ບໍ່ແມ່ນການກິນລ້ຽງຢ່າງເຖິງໃຈ ຫລື ການເມົາມາຍ;
ແລະຢ່າໃຫ້ພວກເຮົາດຳເນີນໃນຄວາມຜິດບາບທາງເພດ ຫລື ໃນຕັນຫາທີ່ບໍ່ສາມາດຄວບຄຸມໄດ້, ແລະບໍ່ແມ່ນໃນການໂຕ້ຖຽງ ຫລື ອິດສາກັນ.
[14]ແຕ່ຈົ່ງແຕ່ງກາຍດ້ວຍພຣະເຢຊູຄຣິດເຈົ້າ, ແລະຢ່າກະກຽມສິ່ງໃດໄວ້ເພື່ອເນື້ອຫນັງ, ແລະເພື່ອຕັນຫາຂອງມັນ.


generated on Tue Jun 17 19:01:42 2025

14 [1]ຈົ່ງຕ້ອນຮັບຜູ້ທີ່ອ່ອນແອໃນຄວາມເຊື່ອ., ໂດຍທີ່ບໍ່ຕ້ອງຕັດສິນໃນຂໍ້ໂຕ້ຖຽງຕ່າງໆ.[2]ຄົນຫນຶ່ງມີຄວາມເຊື່ອວ່າຈະກິນຫຍັງກໍໄດ້,
ແຕ່ອີກຄົນຫນຶ່ງທີ່ອ່ອນແອໃນຄວາມເຊື່ອກໍກິນພຽງແຕ່ຜັກເທົ່ານັ້ນ.

[3]ຂໍຢ່າໃຫ້ຄົນທີ່ກິນທຸກຢ່າງນັ້ນ ດູຖູກຜູ້ທີ່ບໍ່ກິນທຸກຢ່າງ. ແລະຢ່າໃຫ້ຜູ້ທີ່ບໍ່ກິນທຸກຢ່າງຕັດສິນຄົນອື່ນຜູ້ທີ່ກິນທຸກຢ່າງ
ເພາະວ່າພຣະເຈົ້າຊົງຍອມຮັບເຂົາແລ້ວ[4]ທ່ານແມ່ນໃຜ, ທີ່ຈະຕັດສິນຜູ້ຮັບໃຊ້ຄົນອື່ນ? ຜູ້ຮັບໃຊ້ຄົນນັ້ນຈະຍືນຢູ່ ຫລື
ຈະລົ້ມລົງກໍຂຶ້ນຢູ່ກັບນາຍຂອງເຂົາ. ແຕ່ເຂົາຈະໄດ້ຮັບການເຮັດໃຫ້ຍືນຢູ່, ເພາະວ່າອົງພຣະຜູ້ເປັນເຈົ້າຊົງສາມາດທີ່ຈະເຮັດໃຫ້ເຂົາຍືນຢູ່ໄດ້.
[5]ຄົນຫນຶ່ງຖືວ່າມື້ຫນຶ່ງດີກ່ວາອີກມື້. ອີກຄົນຫນຶ່ງຖືວ່າທຸກໆມື້ຄືກັນ. ໃຫ້ແຕ່ລະຄົນເຊື່ອໃນຄວາມຄິດຂອງຕົນເອງ.[6]ຄົນທີ່ຖືມື້,
ກໍຖືເພື່ອອົງພຣະຜູ້ເປັນເຈົ້າ; ແລະຄົນທີ່ກິນ, ກໍກິນເພື່ອອົງພຣະຜູ້ເປັນເຈົ້າ, ເພາະເຂົາຂອບພຣະຄຸນພຣະເຈົ້າ. ຄົນທີ່ບໍ່ກິນ,
ກໍບໍ່ກິນເພື່ອອົງພຣະຜູ້ເປັນເຈົ້າ, ແລະເຂົາກໍຍັງຂອບພຣະຄຸນພຣະເຈົ້າດ້ວຍ.
[7]ເພາະພວກເຮົາທຸກຄົນບໍ່ໄດ້ຢູ່ເພື່ອຕົວເອງ, ແລະບໍ່ໄດ້ຕາຍເພື່ອຕົວເອງ.[8]ເພາະຖ້າພວກເຮົາມີຊີວິດຢູ່, ພວກເຮົາກໍຢູ່ເພື່ອອົງພຣະຜູ້ເປັນເຈົ້າ,
ແລະຖ້າພວກເຮົາຕາຍ, ພວກເຮົາກໍຕາຍເພື່ອອົງພຣະຜູ້ເປັນເຈົ້າ. ດັ່ງນັ້ນ ບໍ່ວ່າພວກເຮົາຈະຢູ່ ຫລື ຕາຍພວກເຮົາກໍເປັນຄົນຂອງພຣະຜູ້ເປັນເຈົ້າ.
[9]ເພາະເພື່ອຈຸດປະສົງນີ້ເອງ ພຣະຄຣິດຈຶ່ງໄດ້ສິ້ນພຣະຊົນ ແລະ ຟື້ນຄືນພຣະຊົນອີກ,
ເພື່ອທີ່ພຣະອົງຈະໄດ້ກາຍເປັນອົງພຣະຜູ້ເປັນເຈົ້າທັງຂອງຄົນຕາຍ ແລະ ຄົນເປັນ.
[10]ແຕ່ທ່ານ, ເປັນຫຍັງທ່ານຈຶ່ງຕັດສິນພີ່ນ້ອງຂອງທ່ານ? ແລະທ່ານ, ເປັນຫຍັງທ່ານຈຶ່ງດູຫມິ່ນພີ່ນ້ອງຂອງທ່ານ?
ເພາະວ່າພວກເຮົາທຸກຄົນຈະຕ້ອງຢືນຢູ່ຕໍ່ຫນ້າບັນລັງແຫ່ງການພິພາກສາຂອງພຣະເຈົ້າ.[11]ເພາະມີຂຽນໄວ້ວ່າ, "ອົງພຣະຜູ້ເປັນເຈົ້າກ່າວວ່າ,
"ພວກເຮົາມີຊີວິດ," ຢູ່ເປັນເວລາດົນນານທຸກຄົນຈະຄຸເຂົ່າລົງກົ້ມຂາບເຮົາ, ແລະ ທຸກລີ້ນຈະສັນຣະເສີນພຣະເຈົ້າ.'"
[12]ສະນັ້ນ, ເຮົາແຕ່ລະຄົນຈະຕ້ອງລາຍງານເລື່ອງຂອງຕົວເອງຕໍ່ພຣະເຈົ້າ.[13]ດ້ວຍເຫດນີ້, ຢ່າໃຫ້ພວກເຮົາຕັດສິນກັນ ແລະ ກັນອີກຕໍ່ໄປເລີຍ,
ແຕ່ຈົ່ງຕັດສິນໃຈໃນສິ່ງນີ້, ວ່າຈະບໍ່ມີຜູ້ໃດວາງກ້ອນຫີນທີ່ຈະເຮັດໃຫ້ທ່ານສະດຸດ ຫລື ດັກໃຫ້ແກ່ພີ່ນ້ອງຂອງເຂົາເລີຍ.
[14]ຂ້ອຍຮູ້ແລະເຊື່ອໃນອົງພຣະເຢຊູຄຣິດເຈົ້າ ບໍ່ມີສິ່ງໃດທີ່ເປັນມົນທິນໃນຕົວເອງເລີຍ. ແຕ່ສຳລັບຄົນທີ່ຖືວ່າສິ່ງໃດສິ່ງ ຫນຶ່ງ ທີ່ບໍ່ສະອາດ
ນັ້ນຈະເປັນສິ່ງທີ່ບໍ່ສະອາດ ສຳ ລັບລາວ.[15]ຖ້າພີ່ນ້ອງຮູ້ສຶກທຸກໃຈເພາະອາຫານທີ່ທ່ານກິນນັ້ນ, ທ່ານກໍບໍ່ໄດ້ຍ່າງໃນຄວາມຮັກອີກຕໍ່ໄປ.
ຢ່າທຳລາຍຄົນນັ້ນທີ່ພຣະຄຣິດເຈົ້າໄດ້ສິ້ນພຣະຊົນເພື່ອເຂົາດ້ວຍອາຫານທີ່ທ່ານກິນເລີຍ.
[16]ສະນັ້ນ, ຢ່າໃຫ້ການກະທຳທີ່ດີຂອງທ່ານເປັນເຫດໃຫ້ຄົນອື່ນເຍາະເຍີ້ຍພວກເຂົາເລີຍ.[17]ເພາະວ່າອານາຈັກຂອງພຣະເຈົ້ານັ້ນບໍ່ແມ່ນການກິນ
ແລະ ການດື່ມ, ແຕ່ເປັນຄວາມຊອບທັມ, ສັນຕິສຸກ, ແລະຄວາມຊື່ນຊົມຍິນດີໃນພຣະວິນຍານບໍຣິສຸດເຈົ້າ.
[18]ເພາະຄົນທີ່ຮັບໃຊ້ພຣະຄຣິດໃນລັກສະນະນີ້ ກໍເປັນທີ່ພໍພຣະທັຍ ພຣະເຈົ້າ ແລະເປັນທີ່ຍອມຮັບຂອງມະນຸດດ້ວຍ.[19]ເຫດສະນັ້ນ,
ໃຫ້ພວກເຮົາສະແຫວງຫາສິ່ງທີ່ຈະເຮັດໃຫ້ເກີດສັນຕິສຸກ ແລະ ສິ່ງທີ່ຈະເສີມສ້າງກັນ ແລະ ກັນຂຶ້ນ.
[20]ຢ່າທຳລາຍການງານຂອງພຣະເຈົ້າເພາະອາຫານເລີຍ. ທຸກຢ່າງບໍ່ມີທີ່ຕິຢ່າງແນ່ນອນ, ແຕ່ຖ້າຄົນນັ້ນກິນ ແລະ
ເຮັດໃຫ້ຄົນອື່ນສະດຸດກໍເປັນສິ່ງທີ່ບໍ່ດີ.[21]ເປັນການດີທີ່ຈະບໍ່ກິນຊີ້ນສັດ, ຫລືບໍ່ດື່ມເຫລົ້າອະງຸ່ນ, ຫລືສິ່ງໃດກໍຕາມທີ່ຈະເຮັດໃຫ້ພີ່ນ້ອງຮູ້ສຶກບໍ່ດີ.
[22]ຄວາມເຊື່ອໃນສິ່ງເຫລົ່ານີ້ທີ່ທ່ານມີ, ຈົ່ງຮັກສາໄວ້ໃຫ້ເປັນເລື່ອງລະຫວ່າງທ່ານກັບພຣະເຈົ້າ.
ຄົນທີ່ບໍ່ຕຳນິຕິຕຽນຕົນເອງໃນສິ່ງທີ່ຕົນເຫັນດີກໍເປັນສຸກ.[23]ຖ້າເຂົາກິນ, ກໍຈະຖືກກ່າວໂທດ. ເພາະເປັນສິ່ງທີ່ບໍ່ໄດ້ມາຈາກຄວາມເຊື່ອ
ແລະສິ່ງໃດກໍຕາມທີ່ບໍ່ໄດ້ມາຈາກຄວາມເຊື່ອກໍເປັນຄວາມບາບ.

15 1ບັດນີ້ ພວກເຮົາມີຄວາມເຊື່ອທີ່ເຂັ້ມແຂງ ຄວນຈະອົດທົນຕໍ່ຈຸດອ່ອນຂອງຄົນທີ່ອ່ອນແອ,
ແລະບໍ່ຄວນເຮັດຫຍັງຕາມຄວາມພໍໃຈຂອງຕົວເອງ. 2ໃຫ້ເຮົາແຕ່ລະຄົນເຮັດໃຫ້ເພື່ອນບ້ານພໍໃຈເພື່ອຄວາມດີ,
ຄືເປັນການເສີມສ້າງເຂົາຂຶ້ນ.

3ເພາະແມ່ນແຕ່ພຣະຄຣິດກໍຍັງບໍ່ຊົງເຮັດໃນສິ່ງທີ່ພຣະອົງພໍພຣະທັຍ. ແຕ່, ເປັນຕາມທີ່ມີຂຽນໄວ້ວ່າ,
"ຄຳເວົ້າການໃສ່ຮ້າຍຂອງຄົນເຫລົ່ານັ້ນທີ່ດູຖູກພຣະອົງຕົກຢູ່ກັບຂ້າພຣະອົງ."4ເພາະສິ່ງໃດກໍຕາມທີ່ໄດ້ຂຽນໄວ້ກ່ອນຫນ້ານີ້
ກໍຂຽນໄວ້ເພື່ອສັ່ງສອນພວກທ່ານ, ເພື່ອທີ່ວ່າພວກທ່ານຈະໄດ້ມີຄວາມເຊື່ອຫມັ້ນໂດຍຄວາມອົດທົນ ແລະໂດຍການຫນູນໃຈຈາກພຣະຄັມພີ.
5ບັດນີ້, ຂໍພຣະເຈົ້າຜູ້ປຣະທານຄວາມອົດທົນ ແລະ ການຫນູນໃຈ ປຣະທານຄວາມເປັນນ້ຳຫນຶ່ງໃຈດຽວກັນໃນພວກທ່ານທັງຫລາຍ
ຕາມຢ່າງພຣະເຢຊູຄຣິດເຈົ້າ.6ຂໍພຣະອົງຊົງເຮັດເຊັ່ນນີ້ເພື່ອທີ່ວ່າທ່ານຈະໄດ້ສັນຣະເສີນພຣະເຈົ້າ ແລະ
ພຣະບິດາເຈົ້າຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາດ້ວຍໃຈດຽວກັນ ແລະ ປາກດຽວກັນ.7ດ້ວຍເຫດນີ້ ຈົ່ງຕ້ອນຮັບກັນ ແລະ ກັນ,
ຄືກັນກັບທີ່ພຣະຄຣິດໄດ້ຊົງຕ້ອນຮັບທ່ານດ້ວຍ, ເພື່ອເປັນການສັນຣະເສີນພຣະເຈົ້າ.
8ເພາະຂ້າພຣະເຈົ້າເວົ້າວ່າ ພຣະຄຣິດໄດ້ຊົງເປັນຜູ້ຮັບໃຊ້ຂອງພວກທີ່ເຂົ້າພິທີຕັດ ເພື່ອເປັນຕົວແທນແຫ່ງຄວາມຈິງຂອງພຣະເຈົ້າ,
ພຣະອົງຊົງເຮັດເຊັ່ນນີ້ເພື່ອທີ່ວ່າພຣະອົງຈະໄດ້ຊົງຢືນຢັນພຣະສັນຍາທີ່ໄດ້ປຣະທານໃຫ້ແກ່ບັນພະບຸຣຸດນັ້ນ,
9ແລະເພື່ອໃຫ້ບັນດາຄົນຕ່າງຊາດໄດ້ຖວາຍກຽດແດ່ພຣະເຈົ້າ ສຳລັບຄວາມເມດຕາຂອງພຣະອົງ. ຕາມທີ່ມີຂຽນໄວ້ວ່າ, “ດ້ວຍເຫດນີ້
ຂ້າພຣະອົງຈະສັນຣະເສີນພຣະອົງໃນບັນດາຄົນຕ່າງຊາດ ແລະ ຮ້ອງເພງສັນຣະເສີນພຣະນາມຂອງພຣະອົງ."
10ແລະມີຄຳກ່າວອີກວ່າ, “ບັນດາ, ຄົນຕ່າງຊາດທັງຫລາຍ, ຈົ່ງຊື່ນຊົມຍິນດີກັບປະຊາຊົນຂອງພຣະອົງ.”11ແລະຍັງມີກ່າວອີກວ່າ, “ບັນ
ດາຄົນຕ່າງຊາດທັງຫມົດ ຈົ່ງສັນຣະເສີນອົງພຣະຜູ້ເປັນເຈົ້າ, ແລະ ໃຫ້ປະຊາຊົນທັງຫມົດຍົກຍ້ອງພຣະອົງ."
12ແລະ, ເອຊາຢາ ກ່າວອີກວ່າ, "ຈະມີຮາກແຫ່ງ ເຢຊີ, ແລະຜູ້ທີ່ຈະຊົງລຸກຂຶ້ນມາປົກຄອງບັນດາຄົນຕ່າງຊາດ. ຄົນຕ່າງຊາດທັງ
ປວງຈະມີຄວາມຫມັ້ນໃຈໃນພຣະອົງ."
13ບັດນີ້ ຂໍພຣະເຈົ້າແຫ່ງຄວາມຫມັ້ນໃຈ ໂຜດເຕີມເຕັມທ່ານດ້ວຍຄວາມຊື່ນຊົມຍິນດີ ແລະ ສັນຕິສຸກທັງປວງໃນຄວາມເຊື່ອນັ້ນ,
ເພື່ອທີ່ທ່ານຈະໄດ້ເຕັມປ່ຽມໃນຄວາມຫມັ້ນໃຈ, ໂດຍຣິດເດດແຫ່ງພຣະວິນຍານບໍຣິສຸດເຈົ້າ.
14ພີ່ນ້ອງທັງຫລາຍ. ຂ້າພຣະເຈົ້າເຊື່ອຫມັ້ນໃນທ່ານ, ຂ້າພຣະເຈົ້າເຊື່ອຫມັ້ນວ່າທ່ານກໍເຕັມປ່ຽມດ້ວຍຄວາມດີ,
ແລະສົມບູນໄປດ້ວຍຄວາມຮູ້ທຸກຢ່າງ. ແລະຂ້າພຣະເຈົ້າເຊື່ອວ່າທ່ານຈະສາມາດເຕືອນສະຕິກັນ ແລະ ກັນໄດ້.
15ແຕ່ຂ້າພຣະເຈົ້າຂຽນເຖິງທ່ານດ້ວຍໃຈກ້າຫານກ່ຽວກັບບາງສິ່ງເພື່ອທີ່ຈະເຕືອນຄວາມຈຳຂອງທ່ານ,
ເນື່ອງຈາກຂອງປຣະທານທີ່ພຣະເຈົ້າໄດ້ປຣະທານແກ່ຂ້າພຣະເຈົ້າ.
16ຂອງປຣະທານນີ້ຄືໃຫ້ຂ້າພຣະເຈົ້າເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດເຈົ້າຕໍ່ຄົນຕ່າງຊາດ, ເພື່ອທີ່ຈະປະຕິບັດຫນ້າທີ່
ເປັນປະໂລຫິດໃນເລື່ອງຂ່າວປະເສີດຂອງພຣະເຈົ້າ. ຂ້າພຣະເຈົ້າຄວນເຮັດເຊັ່ນນີ້ເພື່ອທີ່ຄົນຕ່າງຊາດຈະເປັນເຄື່ອງບູຊາທີ່ພໍພຣະທັຍ,
ທີ່ມອບຖວາຍແດ່ພຣະເຈົ້າໂດຍພຣະວິນຍານບໍຣິສຸດເຈົ້າ.
17ດັ່ງນັ້ນ ຄວາມຍິນດີຂອງຂ້າພຣະເຈົ້າຢູ່ໃນພຣະເຢຊູຄຣິດເຈົ້າ ແລະ ໃນສິ່ງທີ່ກ່ຽວກັບພຣະເຈົ້າ.18ເພາະວ່າຂ້າພຣະເຈົ້າບໍ່ກ້າກ່າວໃນສິ່ງໃດ
ນອກຈາກສິ່ງທີ່ພຣະຄຣິດໄດ້ເຮັດໃຫ້ສຳເລັດຜ່ານທາງຂ້າພຣະເຈົ້າໃນເລື່ອງຄວາມເຊື່ອຂອງຄົນຕ່າງຊາດ. ນີ້ຄືສິ່ງທີ່ເກີດຂຶ້ນໄດ້ໂດຍຄຳສອນ
ແລະ ການກະທຳ,19ໂດຍຣິດເດດແຫ່ງຫມາຍສຳຄັນ ແລະການອັດສະຈັນ, ແລະໂດຍຣິດເດດແຫ່ງພຣະວິນຍານບໍຣິສຸດເຈົ້າ.
ເພື່ອທີ່ວ່າຂ້າພຣະເຈົ້າຈະໄດ້ປະກາດຂ່າວປະເສີດຂອງພຣະຄຣິດຢ່າງຄົບຖ້ວນ ຕັ້ງແຕ່ນະຄອນ ເຢຣູຊາເລັມ, ອ້ອມໄປໄກຮອດແຂວງ ອີລີຣີກົນ.
20ໂດຍການນີ້, ຄວາມປາຖນາຂອງຂ້າພຣະເຈົ້າຄື ການປະກາດຂ່າວປະເສີດ,
ແຕ່ບໍ່ແມ່ນໃນບ່ອນທີ່ມີການອອກພຣະນາມຂອງພຣະຄຣິດເຈົ້າມາກ່ອນ, ເພື່ອທີ່ວ່າຂ້າພຣະເຈົ້າຈະໄດ້ບໍ່ກໍ່ຂຶ້ນເທິງຮາກຖານຂອງຄົນອື່ນ.
21ຕາມທີ່ມີຂຽນໄວ້ວ່າ: "ຄົນເຫລົ່ານັ້ນທີ່ບໍ່ເຄີຍມີໃຜບອກຂ່າວເລື່ອງພຣະອົງກໍຈະໄດ້ເຫັນພຣະອົງ,
ແລະຄົນເຫລົ່ານັ້ນທີ່ຍັງບໍ່ໄດ້ຍິນກໍຈະເຂົ້າໃຈ."
22ດັ່ງນັ້ນ ຈຶ່ງມີເຫດຂັດຂວາງຂ້າພຣະເຈົ້າຫລາຍເທື່ອບໍ່ໃຫ້ມາຫາພວກທ່ານ.23ແຕ່ບັດນີ້,
ຂ້າພະເຈົ້າໄດ້ປະກາດໄປທົ່ວທຸກບ່ອນໃນແຜ່ນດິນເຫລົ່ານີ້ແລ້ວ, ແລະຂ້າພຣະເຈົ້າມີຄວາມປາຖນາເປັນເວລາຫລາຍປີແລ້ວທີ່ຈະມາຫາທ່ານ.
24ເມື່ອໃດກໍຕາມທີ່ຂ້າພຣະເຈົ້າໄປປະເທດສະເປນ, ຂ້າພຣະເຈົ້າຫວັງວ່າຈະມາຢ້ຽມຢາມຫາພວກທ່ານ,
ເພື່ອໃຫ້ພວກທ່ານສົ່ງຂ້າພຣະເຈົ້າເດີນທາງຕໍ່ໄປ, ຫລັງຈາກທີ່ໄດ້ໃຊ້ເວລາອັນເບີກບານໃຈຢູ່ກັບພວກທ່ານເປັນເວລາຊົ່ວຄາວແລ້ວ.25ແຕ່ຂະນະນີ້
ຂ້າພຣະເຈົ້າກຳລັງຈະເດີນທາງໄປທີ່ນະຄອນ ເຢຣູຊາເລັມເພື່ອຮັບໃຊ້ຜູ້ທີ່ເຊື່ອ.
26ເພາະບັນດາຜູ້ທີ່ເຊື່ອໃນແຂວງ ມາເກໂດເນັຽ ແລະ ແຂວງ ອະຂາຢາ ເຕັມໃຈທີ່ຈະຫາເງິນຈຳນວນຫນຶ່ງ
ເພື່ອມອບໃຫ້ແກ່ຄົນທຸກຍາກໃນບັນດາຜູ້ທີ່ເຊື່ອໃນນະຄອນ ເຢຣູຊາເລັມ.27ພວກເຂົາເຕັມໃຈທີ່ຈະເຮັດສິ່ງນີ້, ແລະ, ໃນຄວາມຈິງແລ້ວ,
ພວກເຂົາເປັນຫນີ້ຜູ້ທີ່ເຊື່ອເຫລົ່ານັ້ນດ້ວຍ.
ເພາະຖ້າຄົນຕ່າງຊາດໄດ້ມີສ່ວນຮ່ວມໃນຂອງປຣະທານຝ່າຍວິນຍານຈາກປະຊາຊົນຈາກຊາວເຢຣູຊາເລັມແລ້ວ
ກໍເປັນການສົມຄວນທີ່ພວກເຂົາຈະໄດ້ຮັບໃຊ້ຊາວເຢຣູຊາເລັມໃນເລື່ອງສິ່ງຂອງທາງໂລກດ້ວຍ.
28ດັ່ງນັ້ນ, ເມື່ອຂ້າພຣະເຈົ້າຈັດການເລື່ອງນີ້ສຳເລັດແລ້ວ ແລະໄດ້ມອບຜົນແຫ່ງການສົມທົບເງິນໃຫ້ແກ່ພວກເຂົາແລ້ວ,
ຂ້າພຣະເຈົ້າກໍຈະເດີນທາງຕໍ່ໄປທີ່ປະເທດສະເປນໂດຍການແວ່ຢ້ຽມຢາມທ່ານລະຫວ່າງທາງ.29ຂ້າພຣະເຈົ້າຮູ້ວ່າ
ເມື່ອຂ້າພຣະເຈົ້າມາຫາທ່ານນັ້ນ ຂ້າພຣະເຈົ້າຈະມາພ້ອມກັບພຣະພອນຢ່າງເຕັມທີ່ຂອງພຣະຄຣິດ.
30ບັດນີ້, ພີ່ນ້ອງທັງຫລາຍ, ໂດຍພຣະເຢຊູຄຣິດເຈົ້າພຣະຜູ້ເປັນເຈົ້າຂອງພວກເຮົາ, ແລະໂດຍຄວາມຮັກຂອງພຣະວິນຍານບໍຣິສຸດເຈົ້າ,
ຂ້າພຣະເຈົ້າຂໍອ້ອນວອນທ່ານໃຫ້ຮ່ວມອະທິຖານກັບຂ້າພຣະເຈົ້າ. ຕໍ່ພຣະເຈົ້າດ້ວຍໃຈຕັ້ງຫມັ້ນເພື່ອຂ້າພຣະເຈົ້າ.
31ຂໍອະທິຖານເພື່ອທີ່ຂ້າພຣະເຈົ້າຈະໄດ້ຮັບການຊ່ວຍກູ້ຈາກຄົນເຫລົ່ານັ້ນທີ່ບໍ່ເຊື່ອໃນແຂວງ ຢູດາຍ,
ແລະເພື່ອໃຫ້ການຮັບໃຊ້ຂອງຂ້າພຣະເຈົ້າສຳລັບນະຄອນ ເຢຣູຊາເລັມເປັນທີ່ພໍໃຈຂອງຜູ້ທີ່ເຊື່ອ.

32 ແລະຈົ່ງອະທິຖານເພື່ອໃຫ້ຂ້າພຣະເຈົ້າໄດ້ມາຫາທ່ານຕາມພຣະປະສົງຂອງພຣະເຈົ້າດ້ວຍຊື່ນຊົມຍິນດີ,
ແລະຂ້າພຣະເຈົ້າຈະໄດ້ພັກຜ່ອນຮ່ວມກັນກັບພວກທ່ານ.
33 ຂໍໃຫ້ພຣະເຈົ້າແຫ່ງສັນຕິສຸກສະຖິດຢູ່ກັບທ່ານທັງຫລາຍທຸກຄົນ. ອາແມນ.


generated on Tue Jun 17 19:01:42 2025

16 1ຂ້າພຣະເຈົ້າຂໍຝາກນ້ອງສາວຂອງຂ້າພຣະເຈົ້າໄວ້ກັບພວກທ່ານຄືນາງ ຟອຍເບ, ທີ່ເປັນຜູ້ຮັບໃຊ້ໃນຄຣິສຕະຈັກເມືອງ ເກັນເຂໄອ,
2ເພື່ອໃຫ້ທ່ານໄດ້ຕ້ອນຮັບນາງໃນອົງພຣະຜູ້ເປັນເຈົ້າ. ກະຣຸນາຕ້ອນຮັບນາງຕາມທີ່ເຫມາະສົມທີ່ຜູ້ເຊື່ອຈະເຮັດ,
ແລະກະຣຸນາເບິ່ງແຍງຊ່ວຍເຫລືອນາງໃນທຸກສິ່ງທີ່ນາງຕ້ອງການໃຫ້ທ່ານຊ່ວຍ. ເພາະໂຕນາງເອງກໍໄດ້ຊ່ວຍເຫລືອຜູ້ຄົນຫລວງຫລາຍ,
ລວມທັງຂ້າພຣະເຈົ້າດ້ວຍ.

3ຂໍຝາກທັກທາຍນາງ ປີຊະກີລາ ແລະ ທ່ານ ອາກີລາ ຜູ້ຮ່ວມງານກັບຂ້າພຣະເຈົ້າໃນພຣະເຢຊູຄຣິດເຈົ້າ,
4ເຊິ່ງໄດ້ສ່ຽງຊີວິດຂອງຕົນເອງເພື່ອຊ່ວຍຊີວິດຂອງຂ້າພຣະເຈົ້າ. ຂ້າພຣະເຈົ້າຂໍຂອບໃຈພວກເຂົາທັງສອງ, ແລະບໍ່ພຽງແຕ່ຂ້າພຣະເຈົ້າຄົນດຽວ,
ແຕ່ລວມເຖິງຄຣິສຕະຈັກທຸກແຫ່ງຂອງຄົນຕ່າງຊາດດ້ວຍ. 5ແລະຂໍຝາກທັກທາຍຄຣິສຕະຈັກທີ່ຢູ່ໃນເຮືອນຂອງພວກເຂົາດ້ວຍ.
ຂໍຝາກທັກທາຍທ່ານ ເອປາຍເນດ ເພື່ອນທີ່ຮັກຂອງຂ້າພຣະເຈົ້າ. ຜູ້ເປັນຄົນທຳອິດທີ່ເຂົ້າມາເຊື່ອໃນພຣະຄຣິດໃນແຂວງ ເອເຊັຽ.
6ຂໍຝາກທັກທາຍນາງ ມາຣີ, ຜູ້ທີ່ໄດ້ເຮັດວຽກຫນັກເພື່ອທ່ານທັງຫລາຍ. 7ຂໍຝາກທັກທາຍທ່ານ ອັນດາໂລນີໂກ ກັບ ນາງ ຢູເນັຽ,
ຜູ້ທີ່ເປັນຍາດພີ່ນ້ອງຂອງຂ້າພຣະເຈົ້າ, ແລະເຄີຍຖືກຈັບກຸມຮ່ວມກັບຂ້າພຣະເຈົ້າ. ພວກເຂົາເປັນທີ່ຮູ້ຈັກກັນດີໃນບັນດາອັກຄະສາວົກ.
ອີກທັງໄດ້ຢູ່ໃນພຣະຄຣິດກ່ອນຂ້າພຣະເຈົ້າດ້ວຍ. 8ຂໍຝາກທັກທາຍທ່ານ ອຳເປັຽ ຜູ້ເປັນທີ່ຮັກຂອງຂ້າພຣະເຈົ້າໃນອົງພຣະຜູ້ເປັນເຈົ້າ.
9ຂໍຝາກທັກທາຍທ່ານ ອູຣະບານ, ຜູ້ຮ່ວມງານກັບພວກເຮົາໃນພຣະຄຣິດ, ແລະ ທ່ານ ຊະຕາຂີ, ຜູ້ເປັນທີ່ຮັກຂອງຂ້າພຣະເຈົ້າ.
10ຂໍຝາກທັກທາຍທ່ານ ອະເປເລ, ຜູ້ເປັນທີ່ພໍພຣະທັຍໃນພຣະຄຣິດ. ຂໍຝາກທັກທາຍຄົນໃນຄອບຄົວຂອງທ່ານ ອາຣິສະໂຕບູໂລ.
11ຂໍຝາກທັກທາຍທ່ານ ເຮໂຣດີໂອນ, ຜູ້ເປັນຍາດພີ່ນ້ອງຂອງຂ້າພຣະເຈົ້າ. ຂໍຝາກທັກທາຍຄົນໃນຄອບຄົວຂອງທ່ານ ນາຣະກິດ,
ຜູ້ຢູ່ໃນອົງພຣະຜູ້ເປັນເຈົ້າ.
12ຂໍ ຝາກທັກທາຍຕີຟາຍນາ ແລະ ທີໂຟຊາ, ຜູ້ເຮັດວຽກຫນັກ ໃນອົງພຣະຜູ້ເປັນເຈົ້າ. ຂໍຝາກທັກທາຍເປຊີດາທີ່ຮັກ,
ຜູ້ທີ່ໄດ້ເຮັດວຽກຫລວງຫລາຍໃນອົງພຣະຜູ້ເປັນເຈົ້າ. 13ຂໍຝາກທັກທາຍ ຣູໂຟ, ຜູ້ທີ່ຊົງເລືອກໄວ້ໃນອົງພຣະຜູ້ເປັນເຈົ້າ,
ແລະມານດາຂອງລາວເຊິ່ງເປັນມານດາຂອງຂ້າພຣະເຈົ້າດ້ວຍ. 14ຂໍຝາກທັກທາຍອາຊິນກຣິດ, ຟະເລໂກນ, ເຮຣະມີ, ປະໂຕບາ, ເຮຣະມາ,
ແລະພີ່ນ້ອງທັງຫລາຍທີ່ຢູ່ກັບພວກເຂົາ.
15ຂໍຝາກທັກທາຍກັບ ຟີໂລໂລກ ແລະ ຢູລີອາ, ເນເຣ ແລະ ນ້ອງສາວຂອງເຂົາ, ແລະ ໂອລິມປາ, ກັບຜູ້ທີ່ເຊື່ອທຸກຄົນທີ່ຢູ່ກັບພວກເຂົາ.
16ຈົ່ງທັກທາຍເຊິ່ງກັນ ແລະ ກັນດ້ວຍປະເພນີການຈູບອັນບໍຣິສຸດ, ຄຣິສຕະຈັກທຸກໆແຫ່ງຂອງພຣະຄຣິດຝາກທັກທາຍມາຫາພວກທ່ານດ້ວຍ.
17ພີ່ນ້ອງທັງຫລາຍ, ຂ້າພຣະເຈົ້າຂໍຮ້ອງທ່ານ, ໃຫ້ລະວັງຄົນເຫລົ່ານັ້ນທີ່ສ້າງຄວາມແບ່ງແຍກ ແລະເຮັດໃຫ້ຄົນອື່ນສະດຸດ.
ພວກເຂົາຫລົງຜິດໄປຈາກຄຳສອນທີ່ທ່ານທັງຫລາຍໄດ້ຮຽນມາ. ຈົ່ງປິ່ນຫນ້າຫນີຈາກຄົນເຫຼົ່ານັ້ນ.
18ເພາະວ່າຄົນແບບນັ້ນບໍ່ໄດ້ຮັບໃຊ້ພຣະຄຣິດອົງພຣະຜູ້ເປັນເຈົ້າຂອງພວກເຮົາ, ແຕ່ຮັບໃຊ້ປາກທ້ອງຂອງໂຕເອງ.
ແລະໄດ້ລໍ້ລວງຫົວໃຈຂອງຜູ້ບໍຣິສຸດດ້ວຍຖ້ອຍຄຳທີ່ຫນ້າຟັງ ແລະປະຈົບປະແຈງ.
19ເພາະວ່າຕົວຢ່າງແຫ່ງການເຊື່ອຟັງຂອງພວກທ່ານ. ໄດ້ແຜ່ຂະຫຍາຍ, ໄປທົ່ວ, ທຸກຄົນແລ້ວ,
ດັ່ງນັ້ນຂ້າພຣະເຈົ້າຈຶ່ງມີຄວາມຊື່ນຊົມຍິນດີເພາະທ່ານ ແຕ່ຂ້າພຣະເຈົ້າຢາກໃຫ້ທ່ານສະຫລາດໃນການດີ, ແລະໂງ່ໃນການຊົ່ວ.
20ອີກບໍ່ດົນພຣະເຈົ້າແຫ່ງສັນຕິສຸກຈະຊົງທຳ ລາຍຊາຕານຢູ່ໃຕ້ຕີນຂອງພວກທ່ານ. ຂໍພຣະຄຸນແຫ່ງພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງພວກເຮົາສະຖິດຢູ່ກັບທ່ານເຖີດ.
21ຕີໂມທຽວ, ຜູ້ຮ່ວມງານກັບຂ້າພຣະເຈົ້າ, ລູກີໂອຢາໂຊນ, ແລະໂຊຊິປາໂທ, ຜູ້ເປັນພີ່ນ້ອງຂອງຂ້າພຣະເຈົ້າຝາກທັກທາຍທ່ານທັງຫລາຍດ້ວຍ.
22ຂ້າພຣະເຈົ້າ, ເຕຣະຕຽວ, ຜູ້ຂຽນຈົດຫມາຍນີ້ຕາມຄຳ ເວົ້າ, ຂໍທັກທາຍມາຍັງທ່ານທັງຫລາຍໃນອົງພຣະຜູ້ເປັນເຈົ້າດ້ວຍ.
23ໄຄໂຢ, ເຈົ້າຂອງເຮືອນຜູ້ເບິ່ງແຍງຂ້າພຣະເຈົ້າ ແລະ ເປັນຜູ້ເບິ່ງແຍງຄຣິສຕະຈັກທັງຫມົດ, ຝາກທັກທາຍທ່ານ, ເອຣາຊະໂຕ,
ນາຍຄັງປະຈຳເມືອງ, ແລະ ກູອາໂຕເຊິ່ງເປັນພີ່ນ້ອງຂອງພວກຂ້າພຣະເຈົ້າ.
ຝາກທັກທາຍພວກທ່ານດ້ວຍ 24"ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາສະຖິດຢູ່ກັບພວກທ່ານທຸກໆຄົນ. ອາແມນ."
25ບັດນີ້ ຈົ່ງຖວາຍກຽດແດ່ພຣະອົງຜູ້ຊົງທີ່ສາມາດໃຫ້ທ່ານທັງຫລາຍຕັ້ງຫມັ້ນຄົງຕາມຂ່າວປະເສີດ ເຊິ່ງຂ້າພຣະເຈົ້າໄດ້ປະກາດ ແລະ
ຄຳສອນຂອງພຣະເຢຊູຄຣິດເຈົ້າ, ຕາມການຊົງເປີດເຜີຍຂໍ້ລ້ຳເລີກເຊິ່ງໄດ້ປິດໄວ້ເປັນຄວາມລັບໄວ້ຕັ້ງແຕ່ສະໄຫມບູຮານ,
26ແຕ່ບັດນີ້ມັນໄດ້ຊົງເປີດເຜີຍ, ແລະເຮັດໃຫ້ເຫັນຢ່າງຈະແຈ້ງໂດຍຂໍ້ພຣະຄັມພີເຊິ່ງຂຽນໄວ້ໂດຍບັນດາຜູ້ທຳນວາຍ,
ຕາມພຣະບັນຊາຂອງພຣະເຈົ້າຜູ້ຊົງດຳຣົງເປັນນິດ, ເພື່ອໃຫ້ບັນດາຄົນຕ່າງຊາດທັງຫມົດປະຕິບັດຕາມຄວາມເຊື່ອນັ້ນ.
27ໂດຍພຣະເຢຊູຄຣິດເຈົ້າ, ຂໍພຣະສີຣີຈົ່ງມີແດ່ພຣະເຈົ້າ, ຜູ້ຊົງເປັນຮັດສະຫມີແຕ່ອົງດຽວສືບໄປເປັນນິດ. ອາເມນ.

# 1 ໂກຣິນໂທ

1 1ໂປໂລ, ຜູ້ທີ່ຖືກເອີ້ນໂດຍພຣະເຢຊູຄຣິດເຈົ້າໃຫ້ເປັນອັກຄະສາວົກໂດຍພຣະປະສົງຂອງພຣະເຈົ້າ, ແລະ ໂຊສະເຖນນ້ອງຊາຍຂອງພວກເຮົາ,
2ເຖິງຄຣິສຕະຈັກຂອງພຣະເຈົ້າໃນເມືອງ ໂກຣິນໂທ, ສຳລັບຄົນເຫລົ່ານັ້ນທີ່ໄດ້ອຸທິດຕົນໃນພຣະເຢຊູຄຣິດເຈົ້າ,
ຜູ້ທີ່ຖືກເອີ້ນໃຫ້ເປັນໄພ່ພົນບໍຣິສຸດ. ຂ້າພະເຈົ້າຂຽນເຖິງທຸກຄົນໃນທຸກບ່ອນທີ່ເອີ້ນນາມຊື່ຂອງອົງພຣະເຢຊູຄຣິດເຈົ້າ,
ວ່າເປັນອົງພຣະຜູ້ເປັນເຈົ້າຂອງພວກເຂົາ ແລະ ຂອງພວກເຮົາ. 3ຂໍພຣະຄຸນ ແລະ ສັນຕິສຸກຈາກພຣະເຈົ້າພຣະບິດາ ແລະ
ອົງພຣະເຢຊູຄຣິດເຈົ້າເປັນຂອງທ່ານ.

4ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າ ຂອງຂ້າພະເຈົ້າສະເຫມີສຳລັບທ່ານເພາະພຣະຄຸນຂອງພຣະເຈົ້າທີ່ ພຣະເຢຊູຄຣິດເຈົ້າໄດ້ປະທານໃຫ້ທ່ານ.
5ພຣະອົງໄດ້ເຮັດໃຫ້ທ່ານມີຄວາມຮັ່ງມີໃນທຸກທາງ, ໃນທຸກຖ້ອຍຄຳ ແລະ ດ້ວຍຄວາມຮູ້ທັງຫມົດ,
6ເຊັ່ນດຽວກັບຄຳພະຍານກ່ຽວກັບພຣະຄຣິດເຈົ້າທີ່ໄດ້ຮັບການຢືນຢັນວ່າເປັນຄວາມຈິງໃນບັນດາພວກທ່ານ.

 generated on Tue Jun 17 19:01:42 2025

[7]ສະນັ້ນ ທ່ານບໍ່ຂາດເຂີນຂອງປະທານ ຝ່າຍວິນຍານທີ່ທ່ານໄດ້ລໍຄອຍຢ່າງກະຕືລືລົ້ນຕໍ່ການສຳແດງຂອງພຣະເຢຊູຄຣິດເຈົ້າ.
[8]ພຣະອົງຈະເສີມກຳລັງທ່ານຈົນເຖິງທີ່ສຸດ, ເພື່ອທີ່ທ່ານຈະໄດ້ບໍ່ມີທີ່ຕິໃນວັນຂອງອົງພຣະເຢຊູຄຣິດເຈົ້າ.[9]ພຣະເຈົ້າຜູ້ຊົງສັດຊື່,
ຜູ້ທີ່ຊົງເອີ້ນທ່ານເຂົ້າສູ່ການມີສາມັກຄີທຳກັບພຣະບຸດຂອງພຣະອົງຄືພຣະເຢຊູຄຣິດເຈົ້າ, ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.
[10]ພີ່ນ້ອງທັງຫລາຍບັດນີ້, ຂ້າພະເຈົ້າຂໍຮ້ອງທ່ານດ້ວຍນາມຂອງອົງພຣະເຢຊູຄຣິດເຈົ້າ, ໃຫ້ພວກທ່ານຢູ່ຮ່ວມກັນຢ່າງປອງດອງ, ແລະ
ຢ່າມີການແບ່ງແຍກໃນບັນດາພວກທ່ານ. ຂ້າພະເຈົ້າຂໍຮ້ອງໃຫ້ທ່ານຢູ່ຮ່ວມກັນເປັນຈິດຫນຶ່ງໃຈດຽວກັນ ແລະ ດ້ວຍຈຸດປະສົງດຽວກັນ.
[11]ເນື່ອງຈາກຄົນຂອງນາງ ຂະໂລເອ ໄດ້ເວົ້າຈະແຈ້ງກັບຂ້າພະເຈົ້າ, ວ່າມີການແຕກແຍກໃນບັນດາພວກທ່ານ.
[12]ຂ້າພະເຈົ້າຫມາຍຄວາມວ່າ: ຕ່າງຄົນຕ່າງເວົ້າ, "ຂ້າພະເຈົ້າຢູ່ຝ່າຍຂອງໂປໂລ," ຫລື "ຂ້າພະເຈົ້າຢູ່ຝ່າຍ ອາໂປໂລ," ຫລື
"ຂ້າພະເຈົ້າຢູ່ຝ່າຍເປໂຕ," ຫລື "ຂ້າພະເຈົ້າຢູ່ຝ່າຍພຣະຄຣິດ."[13]ພຣະຄຣິດໄດ້ຖືກແບ່ງແຍກແລ້ວບໍ? ໂປໂລຖືກຄຶງໄວ້ໄມ້ກາງແຂນເພື່ອທ່ານບໍ?
ທ່ານໄດ້ຮັບບັບຕິສະມາໃນນາມຂອງໂປໂລບໍ?
[14]ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າ ທີ່ຂ້າພະເຈົ້າບໍ່ໄດ້ໃຫ້ບັບຕິສະມາແກ່ທ່ານ, ນອກຈາກກຣິສະໂປ ແລະ ໄຄໂຍ.[15]ຈຸດປະສົງນີ້
ເພື່ອບໍ່ມີໃຜສາມາດເວົ້າໄດ້ວ່າທ່ານໄດ້ຮັບບັບຕິສະມາໃນນາມຂອງຂ້າພະເຈົ້າ.[16](ຂ້າພະເຈົ້າໄດ້ໃຫ້ບັບຕິສະມາຄົນໃນຄອບຄົວຂອງ
ສະເຕຟານາ. ນອກຈາກນັ້ນແລ້ວ, ຂ້າພະເຈົ້າບໍ່ຮູ້ວ່າຂ້າພະເຈົ້າໄດ້ໃຫ້ບັບຕິສະມາຜູ້ໃດອີກ.)
[17]ເນື່ອງຈາກ ພຣະຄຣິດບໍ່ໄດ້ສົ່ງຂ້າພະເຈົ້າມາເພື່ອໃຫ້ບັບຕິສະມາ ແຕ່ເພື່ອໃຫ້ປະກາດ ຂ່າວປະເສີດ.
ພຣະອົງບໍ່ໄດ້ສົ່ງຂ້າພະເຈົ້າມາເພື່ອໄປປະກາດດ້ວຍຖ້ອຍຄຳ ແຫ່ງປັນຍາຂອງມະນຸດ,
ເພື່ອບໍ່ໃຫ້ໄມ້ກາງແຂນຂອງພຣະຄຣິດຖືກເຮັດໃຫ້ຫມົດຣິດເດດ
[18]ເນື່ອງຈາກຂໍ້ຄວາມກ່ຽວກັບໄມ້ກາງແຂນນັ້ນ ເປັນເລື່ອງໂງ່ສຳລັບຜູ້ທີ່ກຳລັງຈະຕາຍ. ແຕ່ເປັນຣິດອຳນາດຂອງພຣະເຈົ້າ,
ໃນບັນດາຄົນທີ່ກຳລັງຈະໄດ້ຮັບຄວາມພົ້ນ.[19]ເພາະມີຄຳຂຽນໄວ້ວ່າ, “ເຮົາຈະທຳລາຍປັນຍາຂອງຄົນມີປັນຍາ.
ເຮົາຈະເຮັດໃຫ້ຄວາມເຂົ້າໃຈຂອງຄົນສະຫລາດບໍ່ມີປະໂຫຍດ."
[20]ຄົນມີປັນຍາຢູ່ທີ່ໃດ? ຜູ້ທີ່ຮອບຮູ້ຢູ່ທີ່ໃດ? ນັກໂຕ້ຖຽງຂອງໂລກນີ້ຢູ່ທີ່ໃດ?
ພຣະເຈົ້າຈະເຮັດໃຫ້ສະຕິປັນຍາທາງໂລກກາຍເປັນຄວາມໂງ່ບໍ່ແມ່ນບໍ?[21]ເນື່ອງຈາກໂລກໂດຍປັນຍາຂອງຕົນເອງບໍ່ສາມາດຮູ້ຈັກພຣະເຈົ້າໄດ້,
ພຣະເຈົ້າພໍພຣະທັຍທີ່ຈະຊ່ວຍຄົນເຫລົ່ານັ້ນທີ່ເຊື່ອໃຫ້ພົ້ນໄດ້ດ້ວຍການເທດສະຫນາໂງ່ ໆ.
[22]ພວກຢິວຂໍຫມາຍສຳຄັນ ແລະ ພວກ ກະຣີກຊອກຫາປັນຍາ.[23]ແຕ່ພວກເຮົາປະກາດເລື່ອງ ພຣະຄຣິດຜູ້ທີ່ຖືກຄຶງທີ່ໄມ້ກາງແຂນ,
ຊຶ່ງເປັນສິ່ງທີ່ເຮັດໃຫ້ຄົນຢິວສະດຸດ ແລະ ເປັນເລື່ອງໂງ່ ສຳລັບພວກກະຣີກ.
[24]ແຕ່ສຳລັບຄົນເຫລົ່ານັ້ນ ທີ່ພຣະຜູ້ເປັນເຈົ້າເອີ້ນ, ທັງພວກຢິວ ແລະ ພວກກະຣີກ, ພວກເຮົາປະກາດເລື່ອງພຣະຄຣິດຜູ້ທີ່ເປັນຣິດອຳນາດ ແລະ
ພຣະປັນຍາຂອງພຣະເຈົ້າ.[25]ເພາະສິ່ງທີ່ເບິ່ງຄືວ່າເປັນຄວາມໂງ່ຂອງພຣະເຈົ້າກໍ່ຍັງສະຫລາດກວ່າປັນຍາຂອງມະນຸດ, ແລະສິ່ງທີ່ເບິ່ງຄືວ່າເປັນ
ຄວາມອ່ອນແອຂອງພຣະເຈົ້າ ກໍ່ຍັງເຂັ້ມແຂງກວ່າກຳລັງຂອງມະນຸດ.
[26]ພີ່ນ້ອງທັງຫລາຍ ຈົ່ງພິຈາຣະນາຕອນທີ່ຊົງເອີ້ນທ່ານ, ມີຄົນຈຳນວນຫນ້ອຍ ທີ່ມີປັນຍາຕາມມາດຕະຖານຂອງມະນຸດ.
ມີຫນ້ອຍຄົນທີ່ມີອຳນາດ. ມີຫນ້ອຍຄົນທີ່ເກີດໃນຄອບຄົວທີ່ສູງ.
[27]ແຕ່ພຣະເຈົ້າຊົງເລືອກພວກທີ່ໂລກນີ້ຖືວ່າໂງ່ເພື່ອເຮັດໃຫ້ຄົນທີ່ສະຫລາດອັບອາຍ.
ພຣະເຈົ້າຊົງເລືອກເອົາພວກທີ່ໂລກນີ້ຖືວ່າອ່ອນແອເພື່ອເຮັດໃຫ້ຄົນທີ່ແຂງແຮງອັບອາຍ.
[28]ພຣະເຈົ້າຊົງເລືອກພວກທີ່ຕ່ຳຕ້ອຍ ແລະ ຫນ້າກຽດຊັງໃນໂລກ ພຣະອົງຊົງເລືອກສິ່ງທີ່ເບິ່ງຄືວ່າບໍ່ມີຄ່າ,
ເພື່ອເຮັດໃຫ້ສິ່ງທີ່ຖືວ່າມີຄ່ານັ້ນບໍ່ມີປະໂຫຍດ.[29]ພຣະອົງໄດ້ເຮັດສິ່ງນີ້ ເພື່ອວ່າຈະບໍ່ມີໃຜມີເຫດຜົນທີ່ຈະອວດອ້າງຕໍ່ພຣະອົງໄດ້.
[30]ເພາະສິ່ງທີ່ພຣະເຈົ້າຊົງເຮັດ, ດຽວນີ້ທ່ານໄດ້ຢູ່ໃນພຣະເຢຊູຄຣິດເຈົ້າ,
ຜູ້ທີ່ມາເປັນພຣະປັນຍາຂອງພຣະເຈົ້າເພື່ອພວກເຮົາພຣະອົງຊົງເປັນຄວາມຊອບທຳ, ຄວາມບໍຣິສຸດ ແລະ ການໄຖ່ໂທດຂອງເຮົາທັງຫລາຍ.
[31]ເພື່ອເປັນໄປຕາມທີ່ພຣະຄັມພີໄດ້ກ່າວໄວ້ວ່າ, "ໃຫ້ຜູ້ທີ່ສະແດງອອກ ອວດອ້າງພຣະຜູ້ເປັນເຈົ້າ.”

 generated on Tue Jun 17 19:01:42 2025

2 [1]ພີ່ນ້ອງທັງຫລາຍ ເມື່ອຂ້າພະເຈົ້າມາຫາທ່ານ, ເພື່ອປະກາດຄວາມເລິກລັບຂອງພຣະເຈົ້າແກ່ພວກທ່ານນັ້ນ
ຂ້າພະເຈົ້າບໍ່ໄດ້ມາດ້ວຍຖ້ອຍຄຳຫວ່ານລ້ອມ ຫລື ດ້ວຍສະຕິປັນຍາ.[2]ເພາະຂ້າພະເຈົ້າຕັ້ງໃຈວ່າຈະບໍ່ສະແດງຄວາມຮູ້ເລື່ອງໃດໆ
ໃນບັນດາພວກທ່ານເລີຍ ຍົກເວັ້ນເລື່ອງພຣະເຢຊູຄຣິດເຈົ້າ, ແລະ ການທີ່ພຣະອົງຊົງຖືກຄຶງໄວ້ທີ່ໄມ້ກາງແຂນ.

[3]ແລະ ເມື່ອຂ້າພະເຈົ້າຢູ່ກັບພວກທ່ານທັງຫລາຍ ຂ້າພະເຈົ້າກໍອ່ອນກຳລັງ, ມີຄວາມຢ້ານກົວ, ແລະ ໂຕສັ່ນສະເທືອນຫລາຍ.[4]ຄຳເວົ້າ ແລະ
ຄຳເທສະໜາຂອງຂ້າພະເຈົ້ານັ້ນບໍ່ແມ່ນ ຄຳເວົ້າທີ່ຊັກຊວນດ້ວຍສະຕິປັນຍາ. ແຕ່ສິ່ງເຫລົ່ານັ້ນແມ່ນການສຳແດງອອກຂອງພຣະວິນຍານ ແລະ
ຣິດອຳນາດ,[5]ເພື່ອຄວາມສັດທາຂອງພວກທ່ານຈະບໍ່ຂຶ້ນກັບປັນຍາຂອງມະນຸດ, ແຕ່ຂຶ້ນກັບ ຣິດອຳນາດຂອງພຣະເຈົ້າ.
[6]ບັດນີ້ ຂ້າພະເຈົ້າກຳລັງກ່າວເຖິງປັນຍາທ່າມກາງຄົນທີ່ເປັນຜູ້ໃຫຍ່, ບໍ່ແມ່ນປັນຍາຂອງໂລກນີ້, ຫລືຂອງຜູ້ປົກຄອງຕ່າງໆ,
ຂອງສະໄໝນີ້ທີ່ກຳລັງຈະເສື່ອມສູນໄປ.[7]ແຕ່ຂ້າພະເຈົ້າກ່າວເຖິງພຣະປັນຍາຂອງພຣະເຈົ້າໃນຄວາມຈິງທີ່ເຊື່ອງໄວ້,
ພຣະປັນຍາທີ່ຊົງເຊື່ອງໄວ້ນັ້ນ ພຣະເຈົ້າໄດ້ຊົງກຳນົດໄວ້ກ່ອນປະຖົມມະການ ເພື່ອສະຫງ່າລາສີແກ່ພວກເຮົາ.
[8]ບໍ່ມີຜູ້ປົກຄອງ ໃນສະໄໝນີ້ທີ່ຮູ້ຈັກພຣະປັນຍານີ້, ເພາະຫາກພວກເຂົາເຂົ້າໃຈໃນເວລານັ້ນ,
ພວກເຂົາກໍຈະບໍ່ເອົາອົງພຣະຜູ້ເປັນເຈົ້າແຫ່ງກຽດຕິຍົດໄປຄຶງທີ່ໄມ້ກາງແຂນ.[9]ຕາມທີ່ມີຂຽນໄວ້ວ່າ, “ສິ່ງທີ່ຕາເບິ່ງບໍ່ເຫັນ, ຫູບໍ່ໄດ້ຍິນ,
ແລະຈິດໃຈທີ່ຄິດບໍ່ເຖິງ, ສິ່ງເຫລົ່ານັ້ນແມ່ນສິ່ງທີ່ພຣະເຈົ້າໄດ້ຊົງກຽມໄວ້ສຳລັບຄົນທັງຫລາຍທີ່ຮັກພຣະອົງ."
[10]ສິ່ງເຫລົ່ານີ້ຄື ສິ່ງທີ່ພຣະເຈົ້າໄດ້ເປີດເຜີຍຕໍ່ພວກເຮົາໂດຍທາງພຣະວິນຍານບໍຣິສຸດເຈົ້າ. ເພາະວ່າພຣະວິນຍານບໍຣິສຸດເຈົ້າຊົງຮູ້ທຸກຢ່າງ
ແມ່ນແຕ່ສິ່ງເລິກລັບຕ່າງໆຂອງພຣະເຈົ້າ.[11]ບໍ່ມີໃຜຈະຮູ້ຄວາມຄຶດຂອງຜູ້ອື່ນໄດ້ ຍົກເວັ້ນແຕ່ຈິດວິນຍານຂອງຕົນເອງ? ສະນັ້ນ,
ຄວາມເລິກລັບຕ່າງໆຂອງພຣະເຈົ້າ ກໍບໍ່ມີໃຜສາມາດຮູ້ໄດ້ ມີແຕ່ພຣະວິນຍານບໍຣິສຸດເຈົ້າຂອງພຣະເຈົ້າເອງ.
[12]ແຕ່ຂ້າພະເຈົ້າບໍ່ໄດ້ຮັບເອົາວິນຍານຂອງໂລກ, ແຕ່ໄດ້ຮັບພຣະວິນຍານທີ່ມາຈາກພຣະເຈົ້າ,
ເພື່ອຂ້າພະເຈົ້າຈະສາມາດຮູ້ສິ່ງຕ່າງໆທີ່ພຣະເຈົ້າໄດ້ປະທານໃຫ້ແກ່ຂ້າພະເຈົ້າຢ່າງບໍ່ຈຳກັດ.
[13]ພວກເຮົາກ່າວເຖິງສິ່ງເຫລົ່ານີ້ດ້ວຍຖ້ອຍຄຳທີ່ປັນຍາຂອງມະນຸດບໍ່ສາມາດສອນໄດ້, ແຕ່ດ້ວຍພຣະວິນຍານບໍຣິສຸດເຈົ້າຊົງສອນພວກເຮົາ,
ພຣະວິນຍານບໍຣິສຸດເຈົ້າໄດ້ແປຖ້ອຍຄຳ ຝ່າຍວິນຍານຕ່າງໆ ດ້ວຍປັນຍາຝ່າຍວິນຍານ.
[14]ຜູ້ທີ່ບໍ່ໄດ້ຢູ່ຝ່າຍວິນຍານ ບໍ່ສາມາດຮັບເອົາສິ່ງຕ່າງໆທີ່ເປັນຂອງພຣະວິນຍານຂອງພຣະເຈົ້າໄດ້,
ເພາະວ່າສິ່ງເຫລົ່ານັ້ນເປັນເລື່ອງໂງ່ສຳລັບລາວ. ລາວບໍ່ສາມາດເຂົ້າໃຈສິ່ງຕ່າງໆເຫລົ່ານັ້ນໄດ້ ເພາະເປັນສິ່ງທີ່ຕ້ອງສັງເກດຝ່າຍວິນຍານ.
[15]ຄົນທີ່ຢູ່ຝ່າຍວິນຍານສາມາດສັງເກດຮູ້ທຸກສິ່ງ, ແຕ່ລາວບໍ່ໄດ້ຂຶ້ນກັບການຕັດສິນຂອງຄົນອື່ນໆ.
[16]“ເພາະວ່າຜູ້ໃດຮູ້ຈັກຈິດໃຈຂອງອົງພຣະຜູ້ເປັນເຈົ້າ, ທີ່ລາວສາມາດສອນພຣະອົງໄດ້?”ແຕ່ພວກເຮົາມີຫົວໃຈຂອງພຣະຄຣິດ.


generated on Tue Jun 17 19:01:42 2025

3 [1]ພີ່ນ້ອງທັງຫລາຍ, ຂ້າພະເຈົ້າ, ບໍ່ສາມາດເວົ້າກັບທ່ານຄືກັບພວກທີ່ຢູ່ຝ່າຍຈິດວິນຍານ, ແຕ່ຄືເວົ້າກັບພວກທີ່ຢູ່ຝ່າຍເນື້ອຫນັງ,
ຄືກັບເວົ້າກັບເດັກນ້ອຍໃນພຣະຄຣິດ.[2]ຂ້າພະເຈົ້າລ້ຽງພວກທ່ານດ້ວຍນົມບໍ່ແມ່ນອາຫານແຂງ,
ເພາະໃນອະດີດທ່ານທັງຫລາຍບໍ່ພ້ອມສຳລັບອາຫານແຂງ; ແລະ ແມ່ນແຕ່ດຽວນີ້ທ່ານກໍ່ຍັງບໍ່ພ້ອມ.

[3]ເພາະວ່າທ່ານທັງຫລາຍຍັງຢູ່ຝ່າຍເນື້ອຫນັງ. ເນື່ອງຈາກວ່າຍັງມີຄວາມອິດສາແລະການຜິດຖຽງກັນຢູ່ໃນບັນດາພວກທ່ານ,
ພວກທ່ານກໍ່ໄດ້ດຳຣົງຊີວິດຕາມເນື້ອຫນັງ ແລະ ປະພຶດໂຕຄືກັບຄົນທົ່ວໄປແມ່ນຫລືບໍ່?[4]ເພາະເມື່ອຄົນຫນຶ່ງກ່າວວ່າ, "ຂ້າພະເຈົ້າຕິດຕາມໂປໂລ,"
ແລະ ອີກຄົນກ່າວວ່າ, "ຂ້າພະເຈົ້າຕິດຕາມ ອາໂປໂລ," ພວກທ່ານກໍ່ແມ່ນຄົນທົ່ວໄປບໍ່ແມ່ນບໍ?[5]ອາໂປໂລແມ່ນໃຜ? ໂປໂລແມ່ນໃຜ?
ແມ່ນຜູ້ຮັບໃຊ້ທີ່ໄດ້ສອນພວກທ່ານໃຫ້ເຊື່ອ, ຕາມວຽກງານທີ່ອົງພຣະຜູ້ເປັນເຈົ້າໄດ້ມອບຫມາຍໄວ້ໃຫ້ແຕ່ລະຄົນ.
[6]ຂ້າພະເຈົ້າປູກ, ອາໂປໂລຫົດນ້ຳ, ແຕ່ພຣະເຈົ້າຊົງເຮັດໃຫ້ມັນເຕີບໃຫຍ່.[7]ສະນັ້ນ, ຄົນທີ່ປູກ ແລະ ຄົນທີ່ຫົດນ້ຳບໍ່ສຳຄັນຫຍັງ.
ແຕ່ພຣະເຈົ້າຜູ້ທີ່ເຮັດໃຫ້ການເຕີບໃຫຍ່ນັ້ນຕ່າງຫາກທີ່ສຳຄັນ.
[8]ບັດນີ້ຄົນທີ່ປູກ ແລະ ຄົນທີ່ຫົດນ້ຳກໍ່ເປັນຫນຶ່ງດຽວກັນ, ແລະ ແຕ່ລະຄົນກໍ່ຈະໄດ້ຮັບຄ່າແຮງງານຕາມທີ່ໄດ້ອອກແຮງງານໄປ.
[9]ເພາະຂ້າພະເຈົ້າເປັນເພື່ອນຮ່ວມງານຂອງພຣະເຈົ້າ, ທ່ານທັງຫລາຍກໍ່ເປັນໄຮ່ນາຂອງພຣະເຈົ້າ, ແມ່ນສິ່ງປູກສ້າງຂອງພຣະເຈົ້າ.
[10]ໂດຍພຣະຄຸນຂອງພຣະເຈົ້າທີ່ໄດ້ຖືກມອບໃຫ້ແກ່ຂ້າພະເຈົ້າ ຂ້າພະເຈົ້າໄດ້ວາງຮາກຖານລົງແລ້ວຄ້າຍຄືນາຍຊ່າງທີ່ຊຳນານ, ແລະ
ອີກຄົນຫນຶ່ງກໍ່ມາສ້າງຂຶ້ນຈາກຮາກຖານນັ້ນ. ແຕ່ວ່າແຕ່ລະຄົນຈົ່ງຣະວັງໃຫ້ດີວ່າ ຈະກໍ່ຂຶ້ນຈາກຮາກຖານນັ້ນແນວໃດ.
[11]ເພາະບໍ່ມີຜູ້ໃດຈະວາງຮາກຖານອື່ນໄດ້ອີກ ນອກຈາກທີ່ໄດ້ຖືກວາງລົງໄປແລ້ວຄື, ພຣະເຢຊູຄຣິດເຈົ້າ.
[12]ບັດນີ້ເທິງຮາກຖານນັ້ນ ຖ້າຜູ້ໃດສ້າງຂຶ້ນດ້ວຍທອງ, ເງິນ, ເພັດພອຍ, ໄມ້, ຫຍ້າແຫ້ງ, ຫລື ເຟືອງ,
[13]ວຽກງານຂອງແຕ່ລະຄົນຈະປາກົດໃຫ້ເຫັນ, ເພາະແສງສະຫວ່າງຈະເປີດເຜີຍໃຫ້ເຫັນ. ເຊິ່ງຈະຖືກເປີດເຜີຍໃຫ້ເຫັນດ້ວຍໄຟ.
ໄຟນັ້ນຈະພິສູດວຽກງານທີ່ແຕ່ລະຄົນໄດ້ເຮັດ.
[14]ຖ້າວຽກງານຂອງຜູ້ໃດທີ່ສາມາດອົດທົນໄດ້, ເຂົາກໍ່ຈະໄດ້ຮັບລາງວັນ;[15]ຖ້າວຽກງາານຂອງໃຜຖືກເຜົາໄຫມ້ໄປ,
ເຂົາກໍ່ຈະທົນທຸກກັບການສູນເສຍ, ສ່ວນໂຕເຂົາເອງຈະພົ້ນ, ແຕ່ຄືກັບວ່າພົ້ນອອກຈາກໄຟ.
[16]ທ່ານບໍ່ຮູ້ບໍ່ວ່າພວກທ່ານເປັນວິຫານຂອງພຣະເຈົ້າ ແລະ ພຣະວິນຍານຂອງພຣະເຈົ້າສະຖິດໃນພວກທ່ານ?[17]ຖ້າຜູ້ໃດທຳ
ລາຍວິຫານຂອງພຣະເຈົ້າ, ພຣະເຈົ້າຈະທຳລາຍຜູ້ນັ້ນ. ເພາະວ່າວິຫານຂອງພຣະເຈົ້ານັ້ນບໍ່ຣິສຸດ, ແລະ ພວກທ່ານກໍ່ເຊັ່ນກັນ.
[18]ຢ່າໃຫ້ຜູ້ໃດຫລອກລວງໂຕເອງ. ຖ້າຜູ້ໃດໃນພວກທ່ານຄິດວ່າໂຕເອງມີປັນຍາຕາມຫຼັກຂອງສະໄຫມນີ້, ຈົ່ງໃຫ້ຄົນນັ້ນຍອມເປັນຄົນ“ ໂງ່”
ເພື່ອທີ່ຈະໄດ້ເປັນຄົນມີປັນຍາ.[19]ເພາະວ່າປັນຍາຂອງໂລກນີ້ເປັນຄວາມໂງ່ຈ້າສຳລັບພຣະເຈົ້າ. ດັ່ງທີ່ຂຽນໄວ້ວ່າ,
"ພຣະອົງຈັບຄົນມີປັນຍາດ້ວຍອຸບາຍຂອງເຂົາເອງ."[20]ແລະ ມີຂຽນໄວ້ອີກວ່າ,
"ອົງພຣະຜູ້ເປັນເຈົ້າຊົງຮູ້ວ່າຄວາມຄິດຂອງພວກມີປັນຍານັ້ນແມ່ນບໍ່ມີປະໂຫຍດ."
[21]ສະນັ້ນ ຢ່າເວົ້າໂອ້ອວດເລື່ອງມະນຸດເລີຍ! ເພາະວ່າທຸກຢ່າງເປັນຂອງທ່ານທັງຫລາຍ,[22]ບໍ່ວ່າໂປໂລ, ຫລື ອາໂປໂລ, ຫລື ເປໂຕ, ຫລື ໂລກ, ຫລື
ຊີວິດ, ຫລື ຄວາມຕາຍ, ຫລືສິ່ງຂອງຕ່າງໆໃນປະຈຸບັນ, ຫລືສິ່ງຕ່າງໆໃນອະນາຄົດ, ທຸກສິ່ງລ້ວນເປັນຂອງທ່ານ,[23]ແລະ
ທ່ານທັງຫລາຍເປັນຂອງພຣະຄຣິດ, ແລະ ພຣະຄຣິດຊົງເປັນຂອງພຣະເຈົ້າ.

 generated on Tue Jun 17 19:01:42 2025

# 4

[1]ນີ້ຄືສິ່ງທີ່ຜູ້ຄົນຄວນຈະນັບຖືເຮົາຢ່າງໃດ, ຄືແບບຜູ້ຮັບໃຊ້ຂອງພຣະຄຣິດ ແລະ ຜູ້ດູແລຮັກສາຄວາມຈິງອັນເລິກລັບຂອງພຣະເຈົ້າ.
[2]ໃນສາຍພົວພັນນີ້, ຜູ້ດູແລຮັກສາຕ້ອງເປັນຜູ້ທີ່ໄວ້ວາງໃຈໄດ້.

[3]ແຕ່ສຳລັບຂ້າພະເຈົ້າ ຂ້າພະເຈົ້າຖືວ່າເປັນເລື່ອງທີ່ບໍ່ສຳຄັນຫາກຂ້າພະເຈົ້າຕ້ອງໄດ້ຮັບການຕັດສິນໂດຍພວກທ່ານ
ຫລືໂດຍມະນຸດຄົນໃດຄົນຫນຶ່ງ. ເພາະວ່າຂ້າພະເຈົ້າບໍ່ໄດ້ຕັດສິນໂຕເອງ.[4]ຂ້າພະເຈົ້າບໍ່ຮູ້ວ່າຂ້າພະເຈົ້າເຮັດຜິດອັນໃດ. ແຕ່ນັ້ນບໍ່ໄດ້ຫມາຍ
ຄວາມວ່າຂ້າພະເຈົ້າບໍ່ມີຄວາມຜິດ, ມີແຕ່ອົງພຣະຜູ້ເປັນເຈົ້າເທົ່ານັ້ນທີ່ພິພາກສາຂ້າພະເຈົ້າໄດ້.
[5]ສະນັ້ນ ຢ່າປະກາດການພິພາກສາ ກ່ຽວກັບສິ່ງໃດກ່ອນເຖິງເວລາ, ກ່ອນທີ່ອົງພຣະຜູ້ເປັນເຈົ້າຈະສະເດັດກັບມາ.
ພຣະອົງຈະຊົງຈະເປີດເຜີຍສິ່ງຕ່າງໆຂອງຄວາມມືດທີ່ເຊື່ອງໄວ້ ແລະ ຈະຊົງເປີດເຜີຍຈຸດປະສົງຕ່າງໆໃນໃຈ.
ຫຼັງຈາກນັ້ນແຕ່ລະຄົນຈະໄດ້ຮັບການຍ້ອງຍໍຈາກພຣະເຈົ້າ.
[6]ພີ່ນ້ອງທັງຫລາຍ, ບັດນີ້, ຂ້າພະເຈົ້າໄດ້ນຳຫລັກການຕ່າງໆມາໃຊ້ໃນຕົວຂ້າພະເຈົ້າເອງ ແລະ ອາໂປໂລ, ເພື່ອປະໂຫຍດຂອງພວກທ່ານ
ເພື່ອທ່ານຈະໄດ້ຮຽນຮູ້ຈາກຂ້າພະເຈົ້າເຖິງຄວາມຫມາຍທີ່ໄດ້ກ່າວໄວ້ວ່າ, "ຢ່າອອກນອກເຂດແດນທີ່ໄດ້ຂຽນໄວ້."
ເພື່ອວ່າຈະບໍ່ມີໃຜໃນພວກທ່ານອວດອ້າງໂດຍການຍົກໂຕເອງສູງກວ່າຄົນອື່ນ.[7]ເພາະມີຄົນທີ່ເຫັນວ່າທ່ານແຕກຕ່າງຈາກຄົນອື່ນບໍ?
ມີສິ່ງໃດແດ່ທີ່ທ່ານມີ ແລະ ບໍ່ໄດ້ຮັບໂດຍບໍ່ມີປະໂຫຍດແດ່? ຖ້າທ່ານໄດ້ຮັບມາໂດຍບໍ່ມີປະໂຫຍດ, ເປັນຫຍັງທ່ານຈຶ່ງເວົ້າໂອ້ອວດ
ຄືກັບວ່າທ່ານບໍ່ໄດ້ຮັບມາແບບນັ້ນ?
[8]ທ່ານມີທຸກຢ່າງທີ່ທ່ານຕ້ອງການແລ້ວນໍ! ທ່ານກາຍເປັນຄົນຮັ່ງມີແລ້ວນໍ! ທ່ານໄດ້ເລີ່ມຕົ້ນຄອບຄອງແລ້ວ - ໂດຍບໍ່ມີເຮົາເຂົ້າຮ່ວມນຳ,
ຈິງໆແລ້ວ! ຂ້າພະເຈົ້າຢາກໃຫ້ທ່ານໄດ້ຄອບຄອງ,
ເພື່ອທີ່ຂ້າພະເຈົ້າຈະໄດ້ຄອບຄອງຮ່ວມກັນກັບທ່ານດ້ວຍ[9]ເພາະຂ້າພະເຈົ້າຄິດວ່າພຣະເຈົ້າໄດ້ຊົງແຕ່ງຕັ້ງພວກເຮົາເຊິ່ງເປັນອັກຄະສາວົກໃຫ້ປະກົດຕົວຕາມລຳດັບສຸ
ແລະຢ່າງຜູ້ຖືກລົງໂທດປະຫານ. ຂ້າພະເຈົ້າໄດ້ກາຍມາເປັນພາບທີ່ປະກົດຕໍ່ໂລກ - ຕໍ່ບັນດາທູດສະຫວັນ, ແລະ ຕໍ່ມະນຸດທັງປວງ.
[10]ຂ້າພະເຈົ້າເປັນຄົນໂງ່ເພື່ອເຫັນແກ່ພຣະຄຣິດ, ແຕ່ທ່ານທັງຫລາຍເປັນຄົນມີປັນຍາໃນພຣະຄຣິດ. ຂ້າພະເຈົ້າອ່ອນກຳລັງ, ແຕ່ທ່ານແຂງແຮງ.
ທ່ານໄດ້ຮັບກຽດ, ແຕ່ຂ້າພະເຈົ້າບໍ່ໄດ້ຮັບກຽດ.[11]ຈົນຮອດເວລານີ້ຂ້າພະເຈົ້າຍັງອຶດເຂົ້າ ແລະ ຢາກນ້ຳ, ຂ້າພະເຈົ້າບໍ່ມີເຄື່ອງນຸ່ງຫົ່ມ,
ຖືກທຸບຕີດ້ວຍຄວາມໂຫດຮ້າຍ ແລະ ຂ້າພະເຈົ້າບໍ່ມີບ່ອນຢູ່ອາໄສເປັນຫລັກແຫລ່ງ.
[12]ພວກເຮົາເຮັດວຽກດ້ວຍມື. ຂອງພວກເຮົາເອງ, ເມື່ອຖືກສາບແຊ່ງ, ພວກເຮົາກໍ່ໃຫ້ພອນ. ເມື່ອຖືກຂົ່ມເຫັງ, ພວກເຮົາກໍ່ອົດທົນ.
[13]ເມື່ອຖືກກ່າວຫາ, ພວກເຮົາກໍ່ເວົ້າດ້ວຍຄວາມສຸພາບ. ພວກເຮົາໄດ້ກາຍເປັນ, ຄືຂີ້ເຫຍື້ອຂອງໂລກ ແລະ
ຄ້າຍຄືສິ່ງຂອງເສດເຫລືອທີ່ສຸດຂອງທຸກສິ່ງ ແລະ ຍັງເປັນຢູ່ຈົນເຖິງບັດນີ້.
[14]ຂ້າພະເຈົ້າບໍ່ໄດ້ຂຽນສິ່ງເຫລົ່ານີ້ເພື່ອເຮັດໃຫ້ທ່ານອັບອາຍ, ແຕ່ເພື່ອເຕືອນສະຕິທ່ານໃນຖານະທີ່ທ່ານເປັນລູກທີ່ຮັກຂອງຂ້າພະເຈົ້າ.
[15]ເພາະໃນພຣະຄຣິດ ເຖິງແມ່ນວ່າທ່ານມີຜູ້ປົກຄອງເປັນສິບພັນຄົນ, ແຕ່ທ່ານຈະມີບິດາຫລາຍຄົນກໍ່ບໍ່ໄດ້. ເພາະໃນພຣະເຢຊູຄຣິດເຈົ້າ
ຂ້າພະເຈົ້າໄດ້ກາຍເປັນບິດາຂອງທ່ານຜ່ານທາງຂ່າວປະເສີດ.[16]ສະນັ້ນ ຂ້າພະເຈົ້າຂໍໃຫ້ທ່ານເຮັດຕາມແບບຢ່າງຂ້າພະເຈົ້າ.
[17]ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງສົ່ງຕີໂມທຽວ, ລູກທີ່ຮັກ ແລະ ສັດຊື່ໃນອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ.
ລາວຈະເຕືອນທ່ານກ່ຽວກັບການດຳເນີນຊີວິດຕ່າງໆຂອງຂ້າພະເຈົ້າໃນພຣະຄຣິດ, ດັ່ງທີ່ຂ້າພະເຈົ້າສອນພວກເຂົາໃນທຸກບ່ອນ ແລະ
ທຸກຄຣິສຕະຈັກ.[18]ບັດນີ້ ບາງຄົນໃນພວກທ່ານໄດ້ອວດຕົວຂຶ້ນ, ເຫມືອນກັບວ່າຂ້າພະເຈົ້າຈະບໍ່ມາຫາພວກທ່ານ.
[19]ຖ້າເປັນພຣະປະສົງຂອງອົງພຣະຜູ້ເປັນເຈົ້າ, ຂ້າພະເຈົ້າຈະມາຫາທ່ານໃນໄວໆນີ້. ຕອນນັ້ນຂ້າພະເຈົ້າກໍ່ຈະໄດ້ຮູ້
ບໍ່ພຽງແຕ່ຄຳເວົ້າຂອງຄົນເຫລົ່ານີ້ທີ່ອວດຕົວຂຶ້ນເທົ່ານັ້ນ, ແຕ່ທີ່ຂ້າພະເຈົ້າຈະເຫັນອຳນາດຂອງພວກເຂົາຄືກັນ.
[20]ເພາະວ່າຣາຊອານາຈັກຂອງພຣະເຈົ້ານັ້ນບໍ່ໄດ້ປະກອບດ້ວຍຄຳເວົ້າ ແຕ່ດ້ວຍຣິດອຳນາດ.[21]ພວກທ່ານຕ້ອງການແບບໃດ?
ຈະໃຫ້ຂ້າພະເຈົ້າມາຫາທ່ານດ້ວຍໄມ້ແສ້ ຫລື ດ້ວຍຄວາມຮັກ ແລະ ດ້ວຍໃຈທີ່ອ່ອນສຸພາບ?


generated on Tue Jun 17 19:01:42 2025

5 [1]ພວກຂ້າພະເຈົ້າໄດ້ຍິນຂ່າວເລົ່າລືກັນວ່າ ມີການປະພຶດຜິດທາງເພດໃນບັນດາພວກທ່ານ,
ເປັນການປະພຶດຜິດທີ່ບໍ່ປ່ອຍໃຫ້ເກີດຂຶ້ນແມ້ແຕ່ໃນບັນດາຄົນຕ່າງຊາດ. ມີລາຍງານວ່າ
ມີຄົນຫນຶ່ງໃນພວກທ່ານຫລັບນອນກັບເມຍຂອງພໍ່ຂອງລາວ.[2]ແລະ ທ່ານຍັງອວດໂຕຂຶ້ນ! ແທນທີ່ທ່ານຄວນຈະໂສກເສົ້າບໍ່ແມ່ນບໍ?
ຜູ້ທີ່ເຮັດສິ່ງນີ້ຈະຕ້ອງຖືກໄລ່ອອກຈາກພວກທ່ານ.

[3]ເຖິງແມ່ນວ່າໂຕຂ້າພະເຈົ້າບໍ່ໄດ້ຢູ່ນຳ ແຕ່ຂ້າພະເຈົ້າຍັງຄົງຢູ່ທີ່ນັ້ນໃນຝ່າຍວິນຍານ, ຂ້າພະເຈົ້າຈຶ່ງຕັດສິນຜູ້ກະທຳຜິດນັ້ນ,
ຄືກັບວ່າຂ້າພະເຈົ້າຢູ່ທີ່ນັ້ນນຳ.[4]ເມື່ອພວກທ່ານເຕົ້າໂຮມກັນໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ, ແລະ
ວິນຍານຂອງຂ້າພະເຈົ້າກໍຢູ່ທີ່ນັ້ນເຊັ່ນກັນ. ຂ້າພະເຈົ້າໄດ້ລົງໂທດຄົນນີ້ໃນຣິດທານຸພາບຂອງອົງພຣະເຢຊູຄຣິດເຈົ້າ.
[5]ຂ້າພະເຈົ້າເຮັດສິ່ງນີ້ເພື່ອມອບເຂົາໃຫ້ມານຊາຕານເພື່ອການທຳລາຍເນື້ອຫນັງ,
ເພື່ອວິນຍານຂອງລາວຈະໄດ້ພົ້ນໃນວັນແຫ່ງອົງພຣະຜູ້ເປັນເຈົ້າ.
[6]ຄວາມອວດອ້າງຂອງທ່ານນັ້ນບໍ່ດີເລີຍ. ທ່ານບໍ່ຮູ້ບໍວ່າເຊື້ອແປ້ງພຽງແຕ່ເລັກນ້ອຍກໍເຮັດໃຫ້ແປ້ງດິບທັງກອ້ນຟູຂຶ້ນໄດ້?
[7]ພວກທ່ານຕ້ອງຊຳຣະບາບກັມໂຕເອງຈາກເຊື້ອເກົ່າເພື່ອທ່ານຈະກາຍເປັນແປ້ງດິບໃຫມ່, ປ່ຽນເປັນເຂົ້າຈີ່ບໍ່ມີເຊື້ອ. ເນື່ອງຈາກວ່າພຣະຄຣິດ,
ຜູ້ຊຶ່ງເປັນລູກແກະປັດສະຄາຂອງພວກເຮົານັ້ນໄດ້ຖືກຖວາຍໃຫ້ເປັນເຄື່ອງບູຊາແລ້ວ.[8]ສະນັ້ນ ຈົ່ງມາສະຫລອງເທສະການ,
ບໍ່ແມ່ນດ້ວຍເຊື້ອເກົ່າທີ່ເປັນເຊື້ອຂອງຄວາມປະພຶດຊົ່ວ ແລະ ຄວາມຊົ່ວຮ້າຍ. ແຕ່ໃນທາງກົງກັນຂ້ວາມ,
ໃຫ້ພວກເຮົາສະເຫລີມສະຫລອງດ້ວຍເຂົ້າຈີ່ບໍ່ມີເຊື້ອ ຄືດ້ວຍຄວາມສັດຊື່ແລະ ຄວາມຈິງ.
[9]ຂ້າພະເຈົ້າໄດ້ຂຽນຫາທ່ານວ່າ ຢ່າຄົບຫາກັບຜູ້ຄົນທີ່ປະພຶດຜິດທາງເພດ.[10]ຂ້າພະເຈົ້າບໍ່ໄດ້ກ່າວເຖິງຄົນບາບຂອງໂລກນີ້, ຫລື ຄົນໂລບມາກ,
ຫລື ຄົນໂກງ, ຫລື ຄົນທີ່ຂາບໄຫ້ວບູຊາຮູບປັ້ນ, ເພາະການທີ່ຈະຢູ່ຫ່າງຈາກພວກເຂົານັ້ນ ທ່ານຄົງຕ້ອງອອກໄປຈາກໂລກ.
[11]ແຕ່ບັດນີ້ ຂ້າພະເຈົ້າຂຽນຫາທ່ານບໍ່ໃຫ້ຄົບຫາກັບຜູ້ໃດກໍຕາມທີ່ໄດ້ຊື່ວ່າເປັນພີ່ນ້ອງແຕ່ຍັງເປັນຄົນທີ່ໃຊ້ຊີວິດຢູ່ໃນການປະພຶດຜິດທາງເພດ,
ຫລືຍັງເປັນຄົນໂລບ, ຫລືຍັງເປັນຄົນທີ່ຂາບໄຫ້ວຮູບເຄົາຣົບ, ຫຼືຍັງເປັນຄົນຫຍາບຊ້າ, ຫຼືຍັງເປັນຄົນຂີ້ເຫລົ້າເມົາຢາຢູ່, ຫຼືຍັງເປັນຄົນຂີ້ຕົວະ.
ຢ່າກິນອາຫານຮ່ວມກັບບຸກຄົນແບບນີ້.
[12]ເພາະຂ້າພະເຈົ້າຈະມີສ່ວນຮ່ວມກັບການຕັດສິນລົງໂທດຄົນເຫລົ່ານັ້ນທີ່ຢູ່ພາຍນອກຄຣິສຕະຈັກໄດ້ແນວໃດ? ແຕ່ກົງກັນຂ້າມ,
ທ່ານຕ້ອງຕັດສິນລົງໂທດຄົນເຫລົ່ານັ້ນຢູ່ພາຍໃນຄຣິສຕະຈັກບໍ່ແມ່ນບໍ?[13]ແຕ່ພຣະເຈົ້າຈະເປັນຜູ້ທີ່ພິພາກສາຄົນເຫລົ່ານັ້ນທີ່ຢູ່ພາຍນອກເອງ.
"ຈົ່ງຂັບໄລ່ຄົນຊົ່ວອອກຈາກທ່າມກາງພວກທ່ານ."


generated on Tue Jun 17 19:01:42 2025

# 6 [1]ເມື່ອຜູ້ໃດໃນພວກທ່ານ ຂັດແຍ້ງກັນກັບອີກຄົນ,

ສົມຄວນບໍທີ່ລາວຈະໄປເວົ້າຄວາມກັນທີ່ສານຕໍ່ຫນ້າຜູ້ພິພາກສາທີ່ບໍ່ໄດ້ເປັນຜູ້ທີ່ເຊື່ອຖືແທນທີ່ຈະໄປຢູ່ຕໍ່ຫນ້າຜູ້ທີ່ເຊື່ອທັງຫລາຍ?
[2]ທ່ານບໍ່ຮູ້ບໍ່ວ່າຜູ້ທີ່ເຊື່ອນັ້ນຈະພິພາກສາໂລກ? ແລະ ຖ້າທ່ານຈະພິພາກສາໂລກ,
ທ່ານບໍ່ສາມາດຈັດການກັບສິ່ງຕ່າງໆທີ່ເປັນເລື່ອງເລັກນ້ອຍເຫລົ່ານີ້ໄດ້ເລີຍບໍ?[3]ທ່ານບໍ່ຮູ້ບໍ່ວ່າພວກເຮົາຈະພິພາກສາເຫລົ່າທູດສະຫວັນ?
ແລ້ວຍິ່ງໄປກວ່ານັ້ນ ເຮົາຕັດສິນເລື່ອງຂອງຊີວິດນີ້ບໍ່ໄດ້ເລີຍບໍ?

[4]ດັ່ງນັ້ນ ຖ້າທ່ານຕ້ອງທຳການຕັດສິນຄະດີຕ່າງໆ ທີ່ກ່ຽວກັບຊີວິດປະຈຳວັນ,
ເປັນຫຍັງທ່ານຈຶ່ງວາງຄະດີຄວາມຕ່າງໆນີ້ໄວ້ກັບຜູ້ທີ່ບໍ່ໄດ້ຢູ່ໃນຄຣິສຕະຈັກ?[5]ຂ້າພະເຈົ້າໄດ້ເວົ້າເລື່ອງນີ້ເພື່ອໃຫ້ທ່ານອັບອາຍ.
ບໍ່ມີໃຜໃນທ່າມກາງພວກທ່ານມີປັນຍາພໍທີ່ຈະຈັດການກັບຄວາມຂັດແຍ້ງລະຫວ່າງພີ່ນ້ອງທັງຫລາຍບໍ?[6]ແຕ່ກາຍເປັນວ່າຜູ້ທີ່ເຊື່ອຄົນຫນຶ່ງ,
ໄປຟ້ອງຮ້ອງຜູ້ທີ່ເຊື່ອອີກຄົນກັບສານ, ແລະ ຄະດີຄວາມນັ້ນກໍ່ຖືກຍື່ນຕໍ່ຜູ້ພິພາກສາຜູ້ທີ່ບໍ່ແມ່ນຜູ້ທີ່ເຊື່ອ!
[7]ຄວາມຈິງຄືເມື່ອມີການຂັດແຍ້ງກັນຕ່າງໆທັງຫມົດ ໃນລະຫວ່າງຄຣິສຕຽນ ນັ້ນແມ່ນຄວາມລົ້ມເຫລວສຳລັບທ່ານ.
ເປັນຫຍັງທ່ານບໍ່ຍອມທົນທຸກຍ້ອນຄວາມຮູ້ສຶກຜິດ? ເປັນຫຍັງທ່ານຈຶ່ງບໍ່ຍອມຖືກໂກງ?[8]ແຕ່ທ່ານພັດເຮັດຜິດ ແລະ ຫລອກລວງຄົນອື່ນ, ແລະ
ຄົນເຫລົ່ານີ້ກໍ່ແມ່ນພວກພີ່ນ້ອງຂອງທ່ານເອງ!
[9]ທ່ານບໍ່ຮູ້ບໍ່ວ່າຄົນຊົ່ວຈະບໍ່ໄດ້ຮັບມູນມໍຣະດົກໃນຣາຊອານາຈັກຂອງພຣະເຈົ້າ? ຢ່າຫລົງເຊື່ອຄຳຫລອກລວງ, ຄົນທີ່ປະພຶດຜິດທາງເພດ,
ພວກຂາບໄຫວ້ຮູບເຄົາຣົບ, ພວກລ່ວງປະເວນີ, ພວກຜູ້ຊາຍຂາຍໂຕ, ຄົນເຫລົ່ານັ້ນທີ່ມີພຶດຕິກຳຮັກຮ່ວມເພດ,[10]ພວກຂີ້ລັກ, ພວກໂລບ,
ພວກຂີ້ເຫລົ້າເມົາຢາ, ພວກເວົ້າຕົວະ, ພວກຄົນໂກງ - ບໍ່ມີຄົນໃດໃນພວກເຂົາຈະໄດ້ຮັບມໍຣະດົກໃນຣາຊອານາຈັກຂອງພຣະເຈົ້າ.[11]ແລະ
ບາງຄົນໃນພວກທ່ານເຄີຍເປັນແບບນັ້ນ. ແຕ່ທ່ານທັງຫລາຍໄດ້ຮັບການຊໍາຣະແລ້ວ, ແຕ່ທ່ານທັງຫລາຍໄດ້ຖືກມອບໄວ້ຕໍ່ພຣະເຈົ້າແລ້ວ
ແຕ່ທ່ານທັງຫລາຍໄດ້ຖືກເຮັດໃຫ້ຊອບທັມຕໍ່ພຣະເຈົ້າແລ້ວ ໃນນາມຂອງອົງພຣະເຢຊູຄຣິດເຈົ້າ ແລະ
ໂດຍພຣະວິນຍານຂອງພຣະຜູ້ເປັນເຈົ້າຂອງພວກເຮົາ.
[12]"ຂ້າພະເຈົ້າເຮັດທຸກຢ່າງໄດ້," ແຕ່ບໍ່ແມ່ນທຸກຢ່າງຈະມີປະໂຫຍດ. "ຂ້າພະເຈົ້າເຮັດທຸກຢ່າງໄດ້,"
ແຕ່ຂ້າພະເຈົ້າຈະບໍ່ຍອມຢູ່ໃຕ້ອຳນາດໂດຍສິ່ງໃດໆເຫລົ່ານັ້ນ.[13]"ອາຫານນັ້ນມີໄວ້ສຳລັບກະເພາະ, ແລະ ກະເພາະກໍ່ມີໄວ້ສຳລັບອາຫານ,"
ແຕ່ພຣະເຈົ້າຈະເປັນຜູ້ທຳລາຍທັງສອງຢ່າງ. ຮ່າງກາຍບໍ່ໄດ້ໄວ້ເພື່ອການກະທຳທີ່ຜິດທາງເພດ. ແຕ່ໃນທາງກົງກັນຂ້ວາມ,
ຮ່າງກາຍມີໄວ້ສຳລັບອົງພຣະຜູ້ເປັນເຈົ້າ, ແລະ ອົງພຣະຜູ້ເປັນເຈົ້າຈະຈັດຕຽມສຳລັບຮ່າງກາຍ.
[14]ພຣະເຈົ້າຊົງບັນດານໃຫ້ອົງພຣະຜູ້ເປັນເຈົ້າຄືນຂຶ້ນມາຈາກຕາຍຢ່າງໃດ ແລະ
ຈະຊົງເຮັດໃຫ້ພວກເຮົາເປັນຂຶ້ນມາໂດຍຣິດອຳນາດຂອງພຣະອົງດ້ວຍ.[15]ທ່ານຮູ້ບໍ່ວ່າຮ່າງກາຍຂອງພວກທ່ານເປັນອະວັຍະວະຂອງພຣະຄຣິດ?
ສົມຄວນຫລືທີ່ຂ້າພະເຈົ້າຈະເອົາອະວັຍະວະຂອງພຣະຄຣິດໄປເຂົ້າສ່ວນກັບຄົນຂາຍໂຕ? ຢ່າປ່ອຍໃຫ້ເປັນແບບນັ້ນ!
[16]ທ່ານບໍ່ຮູ້ບໍ່ວ່າຄົນທີ່ເຂົ້າສ່ວນກັບຍິງໂສເພນີກາຍເປັນຮ່າງກາຍດຽວກັບນາງ? ດັ່ງທີ່ ພຣະຄັມພີກ່າວໄວ້ວ່າ,
"ທັງສອງຈະກາຍເປັນຮ່າງກາຍດຽວກັນ."[17]ແຕ່ຜູ້ທີ່ເຂົ້າສ່ວນກັບອົງພຣະຜູ້ເປັນເຈົ້າກໍ່ກາຍເປັນວິນຍານດຽວກັນກັບພຣະອົງ.
[18]ຈົ່ງແລ່ນຫນີຈາກການປະພຶດທີ່ຜິດທາງເພດ! ບາບອື່ນໆນອກຈາກນີ້ທັງຫມົດທີ່ມະນຸດເຮັດນັ້ນຢູ່ນອກຮ່າງກາຍ,
ແຕ່ຜູ້ທີ່ປະພຶດຜິດທາງເພດນັ້ນໄດ້ເຮັດຜິດບາບຕໍ່ຮ່າງກາຍຕົນເອງ.
[19]ທ່ານຮູ້ບໍ່ວ່າຮ່າງກາຍຂອງທ່ານເປັນພຣະວິຫານຂອງພຣະວິນຍານບໍຣິສຸດເຈົ້າ, ຜູ້ສະຖິດຢູ່ພາຍໃນທ່ານ,
ເປັນຜູ້ທີ່ທ່ານໄດ້ຮັບມາຈາກພຣະເຈົ້າ? ທ່ານບໍ່ຮູ້ບໍ່ວ່າທ່ານບໍ່ໄດ້ເປັນເຈົ້າຂອງໂຕທ່ານເອງ?[20]ເພາະພຣະເຈົ້າຊົງຈ່າຍຄ່າສູງເພື່ອຊື້ທ່ານ.
ດ້ວຍເຫດນີ້ ຈົ່ງຖວາຍພຣະກຽດແດ່ພຣະເຈົ້າດ້ວຍຮ່າງກາຍຂອງທ່ານເຖີດ.

7 [1]ກ່ຽວກັບປະເດັນທີ່ພວກທ່ານຂຽນມານັ້ນ: "ການທີ່ຜູ້ຊາຍບໍ່ແຕະຕ້ອງຜູ້ຍິງເລີຍເປັນເລື່ອງທີ່ດີແລ້ວ."[2]ແຕ່ເນື່ອງຈາກມີສິ່ງລໍ້ລວງໃຈຕ່າງໆ
ທີ່ຈະນໍາໄປສູ່ການປະພຶດທີ່ບໍ່ຖືກຕ້ອງທາງເພດ, ຜູ້ຊາຍແຕ່ລະຄົນຄວນມີເມຍເປັນຂອງຕົນເອງ, ແລະ
ແມ່ຍິງແຕ່ລະຄົນຄວນມີຜົວເປັນຂອງຕົນເອງ.

[3]ຜົວຄວນໃຫ້ສິດທີ່ຄູ່ສົມຣົດຈະມີຄວາມສໍາພັນກັນກັບເມຍ, ແລະ ເມຍກໍຄວນໃຫ້ກັບຜົວເຊັ່ນດຽວກັນ.[4]ເມຍບໍ່ມີສິດເຫນືອຮ່າງກາຍຕົນເອງ,
ແຕ່ສິດນັ້ນເປັນຂອງຜົວ. ໃນທາງດຽວກັນ, ຜົວກໍບໍ່ມີສິດເຫນືອຮ່າງກາຍຂອງຕົນ, ແຕ່ວ່າສິດທີ່ນັ້ນເປັນຂອງເມຍ.
[5]ຢ່າປະຕິເສດການມີຄວາມສໍາພັນຕໍ່ກັນລະຫວ່າງຜົວເມຍ, ນອກຈາກທີ່ໄດ້ຕົກລົງເຫັນດີກັນເປັນໄລຍະເວລາຫນຶ່ງຕາມທີ່ກໍານົດ.
ຈຶ່ງເຮັດສິ່ງນີ້ເພື່ອທີ່ທ່ານຈະໄດ້ອຸທິດຕົວໃນການອະທິຖານ. ຈາກນັ້ນກໍຄວນກັບມາມີຄວາມສໍາພັນຕໍ່ກັນອີກຄັ້ງ,
ເພື່ອທີ່ມານຊາຕານຈະບໍ່ໄດ້ລໍ້ລວງທ່ານເພາະວ່າທ່ານຂາດການຄວບຄຸມ ຕົນເອງ.
[6]ແຕ່ຂ້າພະເຈົ້າກ່າວສິ່ງເຫລົ່ານີ້ກັບທ່ານເພື່ອເປັນການອະນຸຍາດ ແລະ ບໍ່ແມ່ນການສັ່ງ.[7]ຂ້າພະເຈົ້າປາຖະຫນາໃຫ້ທຸກຄົນຈະເປັນຄືຂ້າພະເຈົ້າ.
ແຕ່ວ່າແຕ່ລະຄົນກໍມີຂອງປະທານຂອງຕົນເອງຈາກພຣະເຈົ້າ. ຄົນຫນຶ່ງມີຂອງປະທານປະເພດນີ້, ແລະ ອີກຄົນ ມີຂອງປະເພດນັ້ນ.
[8]ຂ້າພະເຈົ້າສາມາດເວົ້າກັບຄົນທີ່ບໍ່ໄດ້ແຕ່ງງານ ແລະ ຄົນທີ່ເປັນຫມ້າຍວ່າ ເປັນການດີຖ້າພວກເຂົາຈະສືບຕໍ່ເປັນໂສດ, ຄືກັນກັບຂ້າພະເຈົ້າ.
[9]ແຕ່ຖ້າພວກເຂົາບໍ່ສາມາດຄວບຄຸມຕົວເອງໄດ້, ພວກເຂົາກໍຄວນຈະແຕ່ງງານ.
ເພາະໃຫ້ພວກເຂົາແຕ່ງງານກໍດີກ່ວາມີໃຈຮ້ອນຮົນດ້ວຍຕັນຫາຄວາມຢາກ.
[10]ສ່ວນຄົນທີ່ແຕ່ງງານແລ້ວ ຂ້າພະເຈົ້າຂໍສັ່ງ-ບໍ່ແມ່ນຕົວຂ້າພະເຈົ້າເອງ, ແຕ່ມາຈາກອົງພຣະຜູ້ເປັນເຈົ້າວ່າ ເມຍບໍ່ຄວນຢູ່ຫ່າງຈາກຜົວ,
[11](ແຕ່ຖ້ານາງແຍກຈາກຜົວຂອງນາງແລ້ວ ນາງກໍບໍ່ຄວນຈະແຕ່ງງານໃຫມ່ ຫລື ບໍ່ກໍກັບໄປຄືນດີກັບຜົວ)-ແລະ ຜົວບໍ່ຄວນຈະປະຮ້າງເມຍ.
[12]ຂ້າພະເຈົ້າຂໍກ່າວກັບພວກທີ່ເຫລືອ - ຂ້າພະເຈົ້າເວົ້າເອງ,- ບໍ່ແມ່ນອົງພຣະຜູ້ເປັນເຈົ້າກ່າວ -ຖ້າພີ່ນ້ອງຄົນໃດມີເມຍທີ່ບໍ່ໄດ້ເປັນຜູ້ເຊື່ອ, ແລະ
ຖ້ານາງພໍໃຈທີ່ຈະຢູ່ກັບລາວ, ລາວກໍບໍ່ຄວນຢ່າຮ້າງນາງ.[13]ຖ້າຜູ້ຍິງຄົນໃດມີຜົວທີ່ບໍ່ໄດ້ເປັນຜູ້ທີ່ເຊື່ອ, ແລະ ຖ້າລາວພໍໃຈທີ່ຈະຢູ່ກັບນາງ,
ນາງກໍບໍ່ຄວນຢ່າຮ້າງຈາກລາວ.[14]ດ້ວຍວ່າຜົວທີ່ບໍ່ເຊື່ອນັ້ນກໍໄດ້ຮັບການຊໍາຣະໃຫ້ບໍຣິສຸດຜ່ານທາງເມຍ, ແລະ
ເມຍທີ່ບໍ່ເຊື່ອນັ້ນກໍໄດ້ຮັບການຊໍາຣະໃຫ້ບໍຣິສຸດຜ່ານທາງຜົວ ຖ້າບໍ່ດັ່ງນັ້ນລູກໆຂອງພວກທ່ານກໍເປັນມົນທິນ.
ແຕ່ໃນຄວາມເປັນຈິງຄືພວກເຂົາໄດ້ຮັບການຊໍາຣະແລ້ວ
[15]ແຕ່ຖ້າຄູ່ຄອງທີ່ບໍ່ເປັນຄຣິສຕຽນຈະຈາກໄປ, ກໍໃຫ້ລາວໄປ. ໃນກໍຣະນີແບບນີ້, ພີ່ນ້ອງຊາຍ ຫລື
ຍິງບໍ່ໄດ້ຖືກຜູກມັດໄວ້ກັບຄໍາສາບານຂອງພວກເຂົາ. ພຣະເຈົ້າຊົງເອີ້ນພວກເຮົາໃຫ້ຢູ່ຢ່າງສະຫງົບສຸກ.[16]ທ່ານຜູ້ເປັນພັນຣະຍາ,
ທ່ານຈະຮູ້ໄດ້ແນວໃດ, ວ່າທ່ານຈະຊ່ວຍສາມີຂອງທ່ານໃຫ້ພົ້ນໄດ້? ຫລື ທ່ານຜູ້ເປັນສາມີ, ທ່ານຈະຮູ້ໄດ້ແນວໃດ,
ວ່າທ່ານຈະຊ່ວຍພັນຣະຍາຂອງທ່ານໃຫ້ພົ້ນໄດ້?
[17]ພຽງແຕ່ໃຫ້ແຕ່ລະຄົນດໍາຣົງຊີວິດຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ກໍານົດໃຫ້ລາວ, ແລະ ຕາມທີ່ພຣະເຈົ້າໄດ້ຊົງເອີ້ນພວກເຂົາແຕ່ລະຄົນ.
ນີ້ແມ່ນຄໍາສັ່ງຂອງຂ້າພະເຈົ້າຕໍ່ຄຣິສຕະຈັກທັງ ຫມົດ.[18]ມີຜູ້ໃດທີ່ໄດ້ເຂົ້າພິທີຕັດແລ້ວ ເມື່ອລາວໄດ້ຮັບການຊົງເອີ້ນໃຫ້ມາເຊື່ອ?
ລາວກໍບໍ່ຄວນພະຍາຍາມເຮັດຕົວຄືກັບຄົນທີ່ຍັງບໍ່ເຂົ້າພິທີຕັດ ມີຜູ້ໃດທີ່ຍັງບໍ່ໄດ້ເຂົ້າພິທີຕັດເມື່ອລາວໄດ້ຮັບການຊົງເອີ້ນໃຫ້ມາເຊື່ອ?
ລາວກໍບໍ່ຄວນຕ້ອງເຂົ້າພິທີຕັດ.[19]ເພາະວ່າການເຂົ້າພິທີຕັດ ຫລື ການບໍ່ເຂົ້າພິທີຕັດນັ້ນບໍ່ສໍາຄັນຫຍັງ.
ແຕ່ການເຊື່ອຟັງພຣະບັນຍັດຕ່າງໆຂອງພຣະເຈົ້າແມ່ນສິ່ງທີ່ສໍາຄັນ.
[20]ແຕ່ລະຄົນຄວນຈະຢູ່ໃນສະຖານະທີ່ລາວເຄີຍຢູ່ ເມື່ອເວລາທີ່ພຣະເຈົ້າຊົງເອີ້ນລາວໃຫ້ມາເຊື່ອ.[21]ພຣະເຈົ້າຊົງເອີ້ນທ່ານເມື່ອເປັນຂ້າໃຊ້ຢູ່ບໍ?
ຢ່າກັງວົນເລີຍ ແຕ່ຖ້າທ່ານສາມາດເປັນອິສຣະໄດ້, ຈົ່ງໃຊ້ສິດນັ້ນ.[22]ເພາະຜູ້ໃດທີ່ອົງພຣະຜູ້ເປັນເຈົ້າຊົງເອີ້ນເມື່ອເປັນຂ້າໃຊ້
ຜູ້ນັ້ນກໍເປັນອິສຣະໃນຂອງອົງພຣະຜູ້ເປັນເຈົ້າ. ໃນລັກສະນະດຽວກັນ ຜູ້ທີ່ໄດ້ຮັບການຊົງເອີ້ນໃຫ້ມາເຊື່ອເມື່ອເປັນອິສຣະ
ລາວເປັນຂ້າໃຊ້ຂອງພຣະຄຣິດ.[23]ພຣະເຈົ້າຊົງຈ່າຍຄ່າສູງເພື່ອຊື້ທ່ານ, ສະນັ້ນຈົ່ງຢ່າເປັນຂ້າໃຊ້ຂອງມະນຸດ.[24]ພີ່ນ້ອງທັງຫລາຍ,
ພວກເຮົາແຕ່ລະຄົນເຄີຍຢູ່ໃນຖານະໃດເມື່ອເຮົາຖືກເອີ້ນໃຫ້ມາເຊື່ອ, ກໍໃຫ້ເຮົາຢູ່ໃນຖານະນັ້ນຕໍ່ໄປ.
[25]ເລື່ອງຄົນເຫລົ່ານັ້ນທີ່ບໍ່ເຄີຍແຕ່ງງານ, ຂ້າພະເຈົ້າບໍ່ໄດ້ຮັບຄໍາສັ່ງຈາກອົງພຣະຜູ້ເປັນເຈົ້າ.
ແຕ່ຂ້າພະເຈົ້າຂໍສະແດງຄວາມເຫັນໃນຖານະທີ່ເປັນຜູ້ໄດ້ຮັບພຣະເມດຕາ, ຈາກອົງພຣະຜູ້ເປັນເຈົ້າ, ໃຫ້ເປັນຜູ້ທີ່ໄວ້ໃຈໄດ້.[26]ດັ່ງນັ້ນ,
ຍ້ອນວ່າຄວາມລໍາບາກທີ່ກໍາລັງໃກ້ເຂົ້າມາ, ຂ້າພະເຈົ້າຄິດວ່າເປັນເລື່ອງທີ່ດີທີ່ທຸກຄົນຈະຢູ່ຢ່າງທີ່ເຂົາເປັນຢູ່.
[27]ທ່ານຜູກພັນກັບພັນຣະຍາແລ້ວບໍ? ຢ່າຫາທາງທີ່ຈະເປັນອິສຣະຈາກນາງ. ທ່ານບໍ່ມີພັນຣະຍາບໍ? ຢ່າຊອກຫາພັນຣະຍາເລີຍ.
[28]ແຕ່ຖ້າທ່ານແຕ່ງງານ, ທ່ານກໍບໍ່ໄດ້ເຮັດບາບ. ແລະ ຖ້າຜູ້ຍິງທີ່ຍັງບໍ່ແຕ່ງງານໄດ້ແຕ່ງງານ, ນາງກໍບໍ່ໄດ້ເຮັດບາບ.
ແຕ່ຄົນເຫລົ່ານັ້ນທີ່ແຕ່ງງານຈະມີຄວາມຫຍຸ້ງຍາກຫລາຍຢ່າງໃນຊີວິດ, ແລະ ຂ້າພະເຈົ້າປາຖນາທີ່ຈະຮັກສາທ່ານໄວ້ຈາກສິ່ງເຫລົ່ານັ້ນ.
[29]ພີ່ນ້ອງທັງຫລາຍ: ຂ້າພະເຈົ້າຫມາຍຄວາມວ່າ, ເວລາເຫລືອຫນ້ອຍແລ້ວ. ຈາກນີ້ໄປ,
ໃຫ້ພວກທີ່ມີພັນຣະຍາມີຊີວິດຄືກັນກັບວ່າບໍ່ມີພັນຣະຍາ.[30]ພວກທີ່ໂສກເສົ້າຄວນປະພຶດຕົວຄືກັບວ່າພວກເຂົາບໍ່ໂສກເສົ້າ, ແລະ
ພວກທີ່ປິຕິຍິນດີຄືກັບວ່າພວກເຂົາບໍ່ມີປິຕິຍິນດີ, ແລະ ພວກທີ່ຊື້ເຄື່ອງຄືກັບວ່າພວກເຂົາບໍ່ໄດ້ເປັນເຈົ້າຂອງຫຍັງເລີຍ;[31]ແລະ
ຄົນເຫລົ່ານັ້ນທີ່ກ່ຽວຂ້ອງກັບສິ່ງຂອງທາງໂລກກໍບໍ່ຄວນສະແດງອອກຄືກັບວ່າພວກເຂົາມີສ່ວນຮ່ວມຢ່າງເຕັມທີ່ກັບສິ່ງເຫລົ່ານັ້ນ.
ເພາະຣະບົບຂອງໂລກນີ້ກໍາລັງຈະສິ້ນສຸດ.
[32]ຂ້າພະເຈົ້າຢາກໃຫ້ທ່ານເປັນອິສຣະຈາກຄວາມກັງວົນຕ່າງໆ. ຜູ້ຊາຍທີ່ບໍ່ໄດ້ແຕ່ງງານກໍເອົາໃຈໃສ່ໃນວຽກງານຂອງອົງພຣະຜູ້ເປັນເຈົ້າ,
ວ່າຈະເຮັດແນວໃດໃຫ້ພຣະອົງພໍພຣະທັຍ.[33]ແຕ່ຜູ້ຊາຍທີ່ແຕ່ງງານແລ້ວກໍເອົາໃຈໃສ່ວຽກງານຂອງໂລກ, ວ່າຈະເຮັດແນວໃດໃຫ້ພັນຣະຍາພໍໃຈ
-[34]ລາວຖືກແຍກອອກເປັນສອງສ່ວນ. ຝ່າຍຜູ້ຍິງທີ່ບໍ່ແຕ່ງງານ ຫລື ຍິງສາວບໍຣິສຸດກໍເອົາໃຈໃສ່ໃນວຽກງານຂອງອົງພຣະຜູ້ເປັນເຈົ້າ,
ວ່າຈະເຮັດແນວໃດຈຶ່ງຈະໄດ້ເປັນຄົນບໍຣິສຸດໃນຝ່າຍຮ່າງກາຍ ແລະ ໃນຝ່າຍວິນຍານ.
ແຕ່ຜູ້ຍິງທີ່ແຕ່ງງານແລ້ວກໍເອົາໃຈໃສ່ໃນວຽກງານຂອງໂລກ, ວ່າຈະເຮັດແນວໃດໃຫ້ສາມີຂອງນາງພໍໃຈ.
[35]ຂ້າພະເຈົ້າກ່າວເລື່ອງນີ້ເພື່ອປະໂຫຍດຂອງທ່ານເອງ, ແລະ ບໍ່ໄດ້ໃຊ້ຫຍັງມາບີບບັງຄັບທ່ານ.
ຂ້າພະເຈົ້າກ່າວສິ່ງນີ້ເພື່ອໃຫ້ທ່ານເຮັດໃນສິ່ງທີ່ຖືກຕ້ອງ, ເພື່ອທີ່ທ່ານຈະອຸທິດຕົນຕໍ່ອົງພຣະຜູ້ເປັນເຈົ້າໂດຍບໍ່ມີສິ່ງໃດມາເຮັດໃຫ້ທ່ານຫວັ່ນໄຫວ.


generated on Tue Jun 17 19:01:42 2025

[36]ແຕ່ຖ້າຊາຍໃດຄິດວ່າລາວບໍ່ສາມາດປະຕິບັດຕໍ່ຄູ່ຫມັ້ນຂອງລາວດ້ວຍການໃຫ້ກຽດໄດ້ ແລະ ຖ້ານາງມີອາຍຸເກີນວັຍແຕ່ງງານແລ້ວ
ແລະມັນເຖິງເວລາທີ່ຈະແຕ່ງງານ - ຊາຍຄົນນັ້ນກໍ່ຄວນເຮັດໃນສິ່ງທີ່ລາວຕ້ອງການ ລາວບໍ່ໄດ້ເຮັດບາບ. ພວກເຂົາຄວນແຕ່ງງານກັນ.
[37]ແຕ່ຊາຍໃດທີ່ຕັ້ງໃຈຫມັ້ນຄົງ, ຖ້າລາວບໍ່ຮູ້ສຶກກົດດັນ ແຕ່ສາມາດຄວບຄຸມຄວາມຕ້ອງການຂອງຕົນເອງໄດ້, ແລະ
ຖ້າລາວຕັດສິນໃຈວ່າຈະເຮັດສິ່ງນີ້, ທີ່ຈະຮັກສາຄູ່ຫມັ້ນຂອງລາວໃຫ້ບໍຣິສຸດ, ລາວກໍ່ເຮັດໄດ້ດີ. [38]ສະນັ້ນ
ຄົນທີ່ແຕ່ງງານກັບຄູ່ຫມັ້ນຂອງເຂົາກໍ່ເຮັດໄດ້ດີແລ້ວ, ແລະ ຄົນທີ່ເລືອກທີ່ຈະບໍ່ແຕ່ງງານກໍ່ເຮັດໄດ້ດີກວ່າ.
[39]ພັນຣະຍາຕ້ອງຜູກພັນກັບສາມີຂອງນາງຕາບໃດທີ່ລາວຍັງມີຊີວິດຢູ່. ແຕ່ຖ້າສາມີຂອງນາງຕາຍ,
ນາງກໍ່ເປັນອິສຣະທີ່ຈະແຕ່ງງານກັບຜູ້ໃດກໍ່ຕາມຄົນທີ່ນາງປາຖນາທີ່ຈະແຕ່ງງານນໍາ, ແຕ່ຕາມຄວາມເຫັນຂອງອົງພຣະຜູ້ເປັນເຈົ້າເທົ່ານັ້ນ.
[40]ແຕ່ຕາມຄວາມຄິດເຫັນຂອງຂ້າພະເຈົ້ານັ້ນ ນາງຈະມີຄວາມສຸກກວ່າຖ້າວ່ານາງມີຊີວິດຄືກັບທີ່ເປັນຢູ່. ແລະ
ຂ້າພະເຈົ້າຄິດວ່າຂ້າພະເຈົ້າມີພຣະວິນຍານຂອງພຣະເຈົ້າຄືກັນ.


generated on Tue Jun 17 19:01:42 2025

8 [1]ສ່ວນເລື່ອງອາຫານທີ່ໃຊ້ບູຊາຮູບເຄົາຣົບນັ້ນ- ພວກເຮົາຮູ້ວ່າ "ພວກເຮົາທຸກຄົນຕ່າງກໍມີຄວາມຮູ້" ຄວາມຮູ້ນັ້ນເຮັດໃຫ້ອວດຕົວ,
ແຕ່ຄວາມຮັກກໍສ້າງຂຶ້ນ.[2]ຖ້າຜູ້ໃດຄິດວ່າເຂົາຮູ້ສິ່ງໃດແລ້ວ, ຜູ້ນັ້ນກໍຍັງບໍ່ຮູ້ຢ່າງທີ່ເຂົາຄວນຮູ້ເລີຍ.[3]ແຕ່ຖ້າຜູ້ໃດຮັກພຣະເຈົ້າ,
ພຣະອົງກໍຊົງຮູ້ຈັກຜູ້ນັ້ນ.

[4]ສະນັ້ນ ເລື່ອງການກິນອາຫານທີ່ບູຊາຮູບເຄົາຣົບຕ່າງໆນັ້ນ-ພວກເຮົາຮູ້ແລ້ວວ່າ "ຮູບເຄົາຣົບໃນໂລກນີ້ນັ້ນ ບໍ່ໄດ້ມີຄວາມຫມາຍຫຍັງເລີຍ"
ແລະ "ມີພຣະເຈົ້າພຽງອົງດຽວ ບໍ່ມີພຣະເຈົ້າອົງອື່ນ."[5]ເຖິງແມ່ນວ່າສິ່ງທີ່ເຂົາ ເອີ້ນກັນວ່າເປັນພຣະນັ້ນ, ອາດຈະມີຢູ່ຈິງທັງໃນສະຫວັນ ແລະ
ແຜ່ນດິນໂລກ, ມີພຣະ ແລະ ເຈົ້າ ຫລວງຫລາຍ.[6]ແຕ່ສຳລັບພວກເຮົານັ້ນ, "ມີພຣະເຈົ້າຄືພຣະບິດາເຈົ້າພຽງອົງດຽວ, ທຸກສິ່ງມາຈາກພຣະອົງ,
ແລະ ເຮົາມີຊີວິດຢູ່ເພື່ອພຣະອົງ, ແລະ ເຮົາມີອົງພຣະເຢຊູຄຣິດເຈົ້າພຽງອົງດຽວ, ທຸກສິ່ງມີຢູ່ໂດຍທາງພຣະອົງ, ແລະ
ເຮົາມີຊີວິດໂດຍທາງພຣະອົງ."
[7]ຢ່າງໃດກໍຕາມ, ບໍ່ແມ່ນທຸກຄົນມີຄວາມຮູ້ແບບນີ້. ເພາະບາງຄົນທີ່ເຄີຍບູຊາຮູບເຄົາຣົບມາກ່ອນ, ເມື່ອພວກເຂົາກິນອາຫານນີ້ກໍ
ຖືວ່າເປັນຂອງບູຊາແກ່ຮູບເຄົາຣົບແທ້ໆ. ໃຈສຳນຶກຜິດແລະ ຊອບຂອງພວກເຂົາຍັງອ່ອນຢູ່ຈຶ່ງເປັນມົນທິນຍ້ອນອາຫານນັ້ນ.
[8]ແຕ່ອາຫານບໍ່ແມ່ນສິ່ງທີ່ສະເຫນີຕົວຕໍ່ພຣະເຈົ້າ. ພວກເຮົາບໍ່ໄດ້ຊົ່ວຊ້າລົງຖ້າພວກເຮົາບໍ່ກິນ, ແລະ ກໍບໍ່ໄດ້ດີຂຶ້ນຖ້າພວກເຮົາກິນ.
[9]ແຕ່ຈົ່ງຣະມັດຣະວັງ ຢ່າປ່ອຍໃຫ້ເສຣີພາບຂອງທ່ານນັ້ນເປັນເຫດໃຫ້ຜູ້ທີ່ອ່ອນແອໃນຄວາມເຊື່ອຕ້ອງສະດຸດ.
[10]ເພາະຖ້າວ່າມີໃຜເຫັນທ່ານຜູ້ມີຄວາມຮູ້, ນັ່ງກິນອາຫານໃນວິຫານຂອງຮູບເຄົາຣົບ. ໃຈສຳນຶກຜິດ ແລະ
ຊອບທີ່ອ່ອນແອຂອງເຂົາກໍຈະຊຸກຍູ້ຂຶ້ນຈົນກິນຂອງທີ່ບູຊາແກ່ຮູບເຄົາຣົບບໍ່ແມ່ນບໍ?
[11]ສະນັ້ນ ຄວາມຮູ້ຂອງທ່ານໃນເລື່ອງທັມະຊາດແທ້ຂອງຮູບເຄົາຣົບ, ໄດ້ທຳລາຍ. ຄົນທີ່ອ່ອນແອກວ່າ,
ເຊິ່ງເປັນພີ່ນ້ອງທີ່ພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອເຂົານັ້ນຕ້ອງຈິບຫາຍໄປ,[12]ສະນັ້ນ, ເມື່ອທ່ານໄດ້ເຮັດບາບຕໍ່ພວກພີ່ນ້ອງ ແລະ
ທຳຮ້າຍຈິດສຳນຶກຮູ້ສຶກຜິດ ແລະ ຊອບທີ່ອ່ອນແອຂອງພວກເຂົາ, ທ່ານກໍໄດ້ເຮັດບາບຕໍ່ພຣະຄຣິດ.[13]ສະນັ້ນ,
ຖ້າອາຫານເຮັດໃຫ້ພີ່ນ້ອງຂອງຂ້າພະເຈົ້າສະດຸດ, ຂ້າພະເຈົ້າກໍຈະບໍ່ກິນຊີ້ນສັດອີກຕໍ່ໄປ,
ເພື່ອທີ່ຂ້າພະເຈົ້າຈະບໍ່ເຮັດໃຫ້ພີ່ນ້ອງຂອງຂ້າພະເຈົ້າລົ້ມລົງ.

 generated on Tue Jun 17 19:01:42 2025

9 [1]ຂ້າພະເຈົ້າບໍ່ມີອິສຣະບໍ? ຂ້າພະເຈົ້າບໍ່ໄດ້ເປັນອັກຄະສາວົກບໍ? ຂ້າພະເຈົ້າບໍ່ໄດ້ເຫັນພຣະເຢຊູຄຣິດເຈົ້າພຣະຜູ້ເປັນເຈົ້າຂອງພວກເຮົາບໍ?
ທ່ານທັງຫລາຍບໍ່ໄດ້ເປັນຄົນງານຂອງຂ້າພະເຈົ້າໃນອົງພຣະຜູ້ເປັນເຈົ້າບໍ?[2]ຖ້າຂ້າພະເຈົ້າບໍ່ໄດ້ເປັນອັກຄະສາວົກຕໍ່ຄົນອື່ນ,
ຢ່າງຫນ້ອຍໆຂ້າພະເຈົ້າກໍ່ເປັນອັກຄະສາວົກຕໍ່ພວກທ່ານ.
ເພາະພວກທ່ານຄືຫລັກຖານສະແດງວ່າການເປັນອັກຄະສາວົກໃນອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ.

[3]ນີ້ຄືຄຳໃຫ້ການຂອງຂ້າພະເຈົ້າຕໍ່ຄົນເຫລົ່ານີ້ທີ່ໄດ້ສອບຖາມຂ້າພະເຈົ້າ:[4]ພວກເຮົາບໍ່ມີສິດທີ່ຈະກິນ ແລະ ດື່ມບໍ?
[5]ພວກເຮົາບໍ່ມີສິດທີ່ຈະພາພັນຣະຍາທີ່ເປັນຜູ້ທີ່ເຊື່ອໄປກັບເຮົາ, ຄືກັບພວກອັກຄະສາວົກຄົນອື່ນໆ, ຫລື ຢ່າງທີ່ພວກພີ່ນ້ອງໃນອົງພຣະຜູ້ເປັນເຈົ້າ,
ແລະ ເປໂຕນັ້ນບໍ?[6]ມີສະເພາະບາຣະນາບາ ແລະ ຂ້າພະເຈົ້າເທົ່ານັ້ນທີ່ຈະຕ້ອງເຮັດວຽກບໍ?
[7]ແມ່ນໃຜແດ່ທີ່ເປັນທະຫານແລ້ວອອກຄ່າໃຊ້ຈ່າຍເອງ? ມີໃຜແດ່ທີ່ເຮັດສວນອະງຸ່ນແລ້ວບໍ່ໄດ້ກິນຫມາກຂອງມັນ? ຫລື
ໃຜແດ່ລ້ຽງຝູງສັດແລ້ວບໍ່ໄດ້ດື່ມນ້ຳນົມຈາກຝູງສັດນັ້ນ?[8]ຂ້າພະເຈົ້າກ່າວສິ່ງເຫລົ່ານີ້ດ້ວຍອຳນາດມະນຸດບໍ?
ກົດບັນຍັດບໍ່ໄດ້ກ່າວໄວ້ເຫມືອນກັນບໍ?
[9]ເພາະມີຂຽນໄວ້ໃນກົດບັນຍັດຂອງໂມເຊວ່າ, "ຢ່າເອົາກະສອບປິດປາກງົວເມື່ອມັນກຳລັງນວດເຂົ້າ." ພຣະເຈົ້າຊົງຫ່ວງງົວແທ້ໆບໍ?
[10]ພຣະອົງບໍ່ໄດ້ຊົງກຳລັງກ່າວເຖິງພວກເຮົາບໍ? ສິ່ງນີ້ໄດ້ຂຽນໄວ້ເພື່ອພວກເຮົາ, ເພາະຄົນທີ່ໄຖນາກໍ່ຄວນໄຖດ້ວຍຄວາມຫວັງ,
ຜູ້ທີ່ນວດເຂົ້າກໍ່ຄວນນວດດ້ວຍຄວາມຄາດຫວັງວ່າຈະໄດ້ສ່ວນແບ່ງເມື່ອເກັບກ່ຽວ.
[11]ຖ້າພວກເຮົາຫວ່ານສິ່ງຕ່າງໆຝ່າຍວິນຍານທ່າມກາງທ່ານແລ້ວ, ຫລາຍເກີນໄປບໍ່ທີ່ພວກເຮົາຈະເກັບກ່ຽວສິ່ງຕ່າງໆຝ່າຍວັດຖຸຈາກທ່ານ?
[12]ຖ້າຄົນອື່ນມີສິດທີ່ຈະໄດ້ຮັບປະໂຫຍດນີ້ຈາກທ່ານ, ພວກເຮົາກໍ່ຄວນທີ່ຈະໄດ້ຮັບຕັ້ງຫລາຍເທົ່າບໍ່ແມ່ນບໍ? ເຖິງຢ່າງໃດກໍ່ຕາມ,
ພວກເຮົາບໍ່ໄດ້ອ້າງສິດນີ້ເລີຍ, ໃນທາງກົງກັນຂ້າມ, ພວກເຮົາອົດທົນທຸກຢ່າງເພື່ອຈະບໍ່ມີສິ່ງກີດຂວາງຂ່າວປະເສີດຂອງພຣະຄຣິດ.
[13]ທ່ານບໍ່ຮູ້ບໍ່ວ່າຄົນເຫລົ່ານັ້ນທີ່ຮັບໃຊ້ຢູ່ໃນພຣະວິຫານ, ກໍ່ໄດ້ຮັບອາຫານຈາກພຣະວິຫານນັ້ນ? ທ່ານບໍ່ຮູ້ບໍ່ວ່າຄົນເຫລົ່ານັ້ນທີ່ຮັບໃຊ້ຢູ່ແທ່ນບູຊາ
ກໍ່ໄດ້ຮັບສ່ວນແບ່ງຈາກເຄື່ອງຖວາຍທີ່ແທ່ນບູຊານັ້ນ?[14]ໃນທຳນອງດຽວກັນ, ອົງພຣະຜູ້ເປັນເຈົ້າຊົງສັ່ງວ່າຄົນເຫລົ່ານັ້ນທີ່ປະກາດຂ່າວປະເສີດ
ຄວນຈະໄດ້ຮັບການລ້ຽງດູຈາກຂ່າວປະເສີດນັ້ນ.
[15]ແຕ່ຂ້າພະເຈົ້າບໍ່ໄດ້ອ້າງສິດໃດໆເຫລົ່ານີ້ເລີຍ. ແລະ ຂ້າພະເຈົ້າບໍ່ໄດ້ຂຽນສິ່ງເຫລົ່ານີ້ເພື່ອຈະໃຫ້ຜູ້ໃດເຮັດສິ່ງໃດໃຫ້ກັບຂ້າພະເຈົ້າ.
ຂ້າພະເຈົ້າຍອມຕາຍເສັຍຍັງດີກ່ວາທີ່ຈະໃຫ້ຜູ້ໃດຖອດຖອນຂ້າພະເຈົ້າຈາກການອວດອ້າງນີ້.[16]ເຖິງແມ່ນວ່າຂ້າພະເຈົ້າປະກາດຂ່າວປະເສີດ,
ຂ້າພະເຈົ້າບໍ່ມີເຫດທີ່ຈະອວດອ້າງໄດ້, ເພາະນີ້ຄືສິ່ງທີ່ຂ້າພະເຈົ້າຕ້ອງເຮັດ. ແລະ ວິບັດແກ່ຂ້າພະເຈົ້າຖ້າຂ້າພະເຈົ້າບໍ່ໄດ້ປະກາດຂ່າວປະເສີດ!
[17]ເພາະຖ້າຂ້າພະເຈົ້າເຮັດສິ່ງນີ້ຢ່າງເຕັມໃຈ, ຂ້າພະເຈົ້າກໍ່ຍັງມີລາງວັນ. ແຕ່ຖ້າບໍ່ເຕັມໃຈ,
ຂ້າພະເຈົ້າກໍ່ຍັງມີຄວາມຮັບຜິດຊອບທີ່ໄດ້ຮັບມອບໄວ້ກັບຂ້າພະເຈົ້າ.[18]ສະນັ້ນລາງວັນຂອງຂ້າພະເຈົ້າແມ່ນຫຍັງ? ນັ້ນຄືເມື່ອຂ້າພະເຈົ້າປະກາດ,
ຂ້າພະເຈົ້າໃຫ້ຂ່າວປະເສີດໂດຍບໍ່ຄິດລາຄາ ແລະ ບໍ່ໄດ້ໃຊ້ສິດໃນຂ່າວປະເສີດນັ້ນຢ່າງຄົບຖ້ວນ
[19]ເພາະເຖິງແມ່ນຂ້າພະເຈົ້າໄດ້ເປັນອິສຣະຈາກທຸກຄົນ, ຂ້າພະເຈົ້າກໍ່ຍອມເປັນຜູ້ຮັບໃຊ້ຂອງທຸກຄົນ,
ເພື່ອຂ້າພະເຈົ້າຈະໄດ້ນຳຄົນຫວງຫລາຍມາເປັນສິດ.[20]ຕໍ່ພວກຊາວຢິວຂ້າພະເຈົ້າກໍ່ໄດ້ກາຍເປັນຄົນຢິວ, ເພື່ອຈະໄດ້ໃຈພວກຊາວຢິວ.
ຕໍ່ຄົນເຫລົ່ານັ້ນທີ່ຢູ່ໃຕ້ກົດບັນຍັດ, ຂ້າພະເຈົ້າກໍ່ປະພຶດຕົວຄືກັບຄົນທີ່ຢູ່ໃຕ້ກົດບັນຍັດ. ເພື່ອຈະໄດ້ໃຈຄົນເຫລົ່ານັ້ນທີ່ຢູ່ໃຕ້ກົດບັນຍັດ
ຂ້າພະເຈົ້າເຮັດສິ່ງນີ້ເຖິງແມ່ນວ່າຕົວຂ້າພະເຈົ້າເອງບໍ່ໄດ້ຢູ່ໃຕ້ກົດບັນຍັດ.
[21]ຕໍ່ຄົນເຫລົ່ານັ້ນທີ່ຢູ່ນອກກົດບັນຍັດ, ຂ້າພະເຈົ້າກໍ່ປະພຶດຕົວຄືກັບຄົນທີ່ຢູ່ນອກກົດບັນຍັດ, ເຖິງແມ່ນວ່າຂ້າພະ
ເຈົ້າເອງບໍ່ໄດ້ຢູ່ນອກກົດບັນຍັດຂອງພຣະເຈົ້າ, ແຕ່ຢູ່ໃຕ້ພຣະບັນຍັດຂອງພຣະຄຣິດ. ຂ້າພະເຈົ້າເຮັດສິ່ງນີ້ເພື່ອຈະໄດ້ໃຈຄົນເຫລົ່າ
ນີ້ທີ່ຢູ່ນອກກົດບັນຍັດ.[22]ຕໍ່ຄົນອ່ອນແອ ຂ້າພະເຈົ້າກໍ່ເຮັດຄືກັບຄົນອ່ອນແອ, ເພື່ອຈະໄດ້ໃຈຄົນອ່ອນແອນັ້ນ. ຂ້າພະເຈົ້າຍອມເປັນຄົນ
ທຸກຊະນິດຕໍ່ຄົນທັງປວງ, ເພື່ອຂ້າພະເຈົ້າຈະຊ່ວຍເຂົາໃຫ້ພົ້ນໄດ້ໂດຍທຸກວິທີທາງ.[23]ຂ້າພະເຈົ້າເຮັດທັງຫມົດກໍ່ເພາະເຫັນແກ່ຂ່າວປະເສີດ,
ເພື່ອຂ້າພະເຈົ້າຈະໄດ້ມີສ່ວນໃນພຣະພອນແຫ່ງຂ່າວປະເສີດນັ້ນ.
[24]ທ່ານບໍ່ຮູ້ບໍ່ວ່າພວກທີ່ແລ່ນແຂ່ງນັ້ນ ຕ້ອງແລ່ນນຳກັນທຸກຄົນ, ແຕ່ມີພຽງຄົນດຽວທີ່ໄດ້ຮັບລາງວັນ? ສະນັ້ນ ຈົ່ງແລ່ນເພື່ອຊີງລາງວັນມາໃຫ້ໄດ້.
[25]ນັກກິລາຍັງຕ້ອງຄວບຄຸມໂຕເອງໃນການຝຶກຊ້ອມ. ຕ່າງກໍ່ຢູ່ໃນລະບຽບວິນັຍຢ່າງເຄັ່ງຄັດ ພວກເຂົາເຮັດເພື່ອຈະໄດ້ມົງກຸດທີ່ຫ່ຽວແຫ້ງໄດ້,
ແຕ່ເຮົາແລ່ນເພື່ອຈະໄດ້ມົງກຸດຊຶ່ງບໍ່ມີວັນຫຽວແຫ້ງ.[26]ເຖິງຢ່າງໃດກໍ່ຕາມ ຂ້າພະເຈົ້າກໍ່ບໍ່ໄດ້ແລ່ນໂດຍບໍ່ມີເປົ້າຫມາຍ
ແລະບໍ່ໄດ້ຕໍ່ສູ້ແບບນັກມວຍທີ່ຊົກລົມ.[27]ແຕ່ຂ້າພະເຈົ້າກຳຈັດເນື້ອຫນັງຂອງຂ້າພະເຈົ້າ ແລະ ໃຫ້ຢູ່ໃຕ້ການຄວບຄຸມ, ເພື່ອວ່າຫລັງຈາກທີ່ຂ້າພະ
ເຈົ້າໄດ້ປະກາດໃຫ້ຄົນອື່ນແລ້ວ, ຂ້າພະເຈົ້າຈະບໍ່ເປັນຄົນທີ່ໃຊ້ການບໍ່ໄດ້ເອງ.

 generated on Tue Jun 17 19:01:42 2025

10 [1]ພີ່ນ້ອງທັງຫລາຍ, ຂ້າພະເຈົ້າຢາກໃຫ້ພວກທ່ານຮູ້ວ່າ, ບັນພະບຸຣຸດຂອງພວກເຮົາທຸກຄົນເພິ່ນໄດ້ຢູ່ໃຕ້ການຄຸ້ມຄອງຂອງເສົາເມກ ແລະ
ໄດ້ຍ່າງຜ່ານທະເລແດງໄປທຸກຄົນ.[2]ທຸກຄົນໄດ້ຮັບບັບຕິສະມາໃນເມກ ແລະ ໃນທະເລເຂົ້າຮ່ວມກັບໂມເຊ,[3]ແລະ
ທຸກຄົນໄດ້ກິນອາຫານຝ່າຍວິນຍານຢ່າງດຽວກັນ.[4]ທຸກຄົນໄດ້ດື່ມນ້ຳຝ່າຍວິນຍານຢ່າງດຽວກັນ. ເພາະທຸກຄົນໄດ້ດື່ມຈາກສີ
ລາຝ່າຍວິນຍານທີ່ຕິດຕາມພວກເຂົາ, ສີລານັ້ນຄືພຣະເຢຊູຄຣິດເຈົ້າ.

[5]ແຕ່ພຣະເຈົ້າບໍ່ໄດ້ຊົງພໍພຣະທັຍຄົນສ່ວນຫຼາຍໃນພວກເຂົາ, ແລະ ສົບຂອງພວກເຂົາກໍຖືກກະແຈກກະຈາຍຢູ່ໃນຖິ່ນແຫ້ງແລ້ງກັນດານ.
[6]ດຽວນີ້ສິ່ງຕ່າງໆ ເຫລົ່ານີ້ກໍເປັນບົດຮຽນໃຫ້ກັບເຮົາ, ຢ່າໃຫ້ເຮົາປາຖນາທີ່ຈະເຮັດສິ່ງທີ່ຊົ່ວຮ້າຍຕ່າງໆ ຄືກັບທີ່ພວກເຂົາເຄີຍເຮັດ
[7]ຢ່າເປັນຄົນກາບໄຫ້ວຮູບເຄົາຣົບ, ດັ່ງທີ່ບາງຄົນໃນພວກເຂົາເຄີຍເປັນ. ຕາມທີ່ມີຄຳຂຽນໄວ້ວ່າ, "ປະຊາຊົນກໍນັ່ງລົງ ກິນ ແລະ ດື່ມ,
ແລ້ວກໍລຸກຂຶ້ນເຕັ້ນລຳກັນ."[8]ຢ່າໃຫ້ເຮົາປະພຶດຜິດທາງເພດຄືກັບທີ່ຫລາຍຄົນໃນພວກເຂົາໄດ້ເຄີຍເຮັດ. ເພາະໃນວັນດຽວ ຄົນຈຳ
ນວນສອງຫມື່ນສາມພັນຄົນຕ້ອງຕາຍຍ້ອນເຫດນີ້.
[9]ເຊັ່ນດຽວກັນ ຢ່າທົດລອງອົງພຣະຜູ້ເປັນເຈົ້າ, ຢ່າງທີ່ຫລາຍຄົນໃນພວກເຂົາເຮັດ ແລ້ວກໍຕ້ອງຕາຍດ້ວຍງູພິດຕອດ.[10]ເຊັ່ນດຽວກັນ
ຢ່າຈົ່ມເຫມືອນທີ່ຫລາຍຄົນໃນພວກເຂົາເຮັດ, ແລ້ວກໍຖືກທຳລາຍດ້ວຍເພັຊະຄາດ.
[11]ສິ່ງຕ່າງໆເຫລົ່ານີ້ໄດ້ເກີດຂຶ້ນກັບພວກເຂົາເພື່ອເປັນຕົວຢ່າງແກ່ຜູ້ອື່ນ ໄດ້ຮັບການບັນທຶກໄວ້ເພື່ອແນວທາງແກ່ເຮົາ
ສຳລັບພວກເຮົາຜູ້ຊຶ່ງມາເຖິງວາຣະສຸດທ້າຍຂອງຍຸກນີ້.[12]ເຫດສະນັ້ນທຸກຄົນທີ່ຄິດວ່າຕົນເອງຫມັ້ນຄົງດີແລ້ວ
ຈົ່ງຣະວັງໃຫ້ດີເພື່ອທີ່ເຂົາຈະບໍ່ລົ້ມລົງ[13]ບໍ່ມີການທົດລອງໃດໆ ເກີດຂຶ້ນກັບທ່ານ ນອກເຫນືອຈາກການທົດລອງທີ່ເຄີຍເກີດກັບມະນຸດທຸກຄົນ
ພຣະເຈົ້າຊົງສັດຊື່ ພຣະອົງຈະບໍ່ຍອມໃຫ້ທ່ານຖືກທົດລອງເກີນກວ່າທີ່ທ່ານຈະທົນໄດ້. ພ້ອມກັບການທົດລອງນັ້ນ
ພຣະອົງຈະຊົງໂຜດໃຫ້ມີທາງຫນີລອດດ້ວຍ ເພື່ອໃຫ້ທ່ານສາມາດອົດທົນໄດ້
[14]ພວກທີ່ຮັກຂອງຂ້າພະເຈົ້າ, ຈົ່ງຫລີກຫນີການຂາບໄຫວ້ຮູບເຄົາຣົບ.[15]ຂ້າພະເຈົ້າເວົ້າກັບທ່ານຄືກັບເວົ້າກັບຄົນທີ່ມີປັນຍາ,
ເພື່ອທ່ານຈະພິຈາຣະນາວ່າຂ້າພະເຈົ້າຫມາຍເຖິງອັນໃດ.[16]ຖ້ວຍແຫ່ງພຣະພອນທີ່ພວກເຮົາໄດ້ຂໍພຣະພອນນັ້ນ, ເຮັດໃຫ້ເຮົາໄດ້ເຂົ້າສ່ວນໃນພ
ຣະໂລຫິດຂອງພຣະຄຣິດບໍ່ແມ່ນບໍ? ເຂົ້າຈີ່ທີ່ເຮົາຫັກອອກ, ເຮັດໃຫ້ພວກເຮົາໄດ້ເຂົ້າສ່ວນໃນພຣະກາຍຂອງພຣະຄຣິດບໍ່ແມ່ນບໍ?[17]ເນື່ອງຈາກ
ມີເຂົ້າຈີ່ກ້ອນດຽວ, ພວກເຮົາຊຶ່ງເປັນຫລາຍບຸກຄົນ ຄືເປັນກາຍດຽວ. ເຮົາທຸກຄົນຕ່າງໄດ້ຮັບຈາກເຂົ້າຈີ່ກ້ອນດຽວກັນນັ້ນ.
[18]ຈົ່ງເບິ່ງຊາວອິສະຣາເອນ: ພວກເຂົາເຫລົ່ານັ້ນທີ່ກິນເຄື່ອງຖວາຍບູຊາ ກໍມີສ່ວນຮ່ວມທີ່ແທ່ນບູຊາບໍ່ແມ່ນບໍ?[19]ດັ່ງນັ້ນ ຂ້າພະເຈົ້າຈະເວົ້າແນວ
ໃດ? ຮູບເຄົາຣົບນັ້ນສຳຄັນຫຍັງ? ຫລື ອາຫານທີ່ຖວາຍບູຊາແກ່ຮູບເຄົາຣົບນັ້ນສຳຄັນຫຍັງ?
[20]ແຕ່ຂ້າພະເຈົ້າ ໄດ້ເວົ້າເຖິງການທີ່ຄົນຕ່າງຊາດຖວາຍບູຊານັ້ນ, ພວກເຂົາຖວາຍສິ່ງຕ່າງໆເຫລົ່ານີ້ໃຫ້ກັບຜີມານຮ້າຍ ບໍ່ໄດ້ຖວາຍແກ່ພຣະເຈົ້າ.
ຂ້າພະເຈົ້າບໍ່ຕ້ອງການໃຫ້ທ່ານເປັນຜູ້ມີສ່ວນຮ່ວມກັບຜີມານຮ້າຍເຫລົ່ານັ້ນ![21]ທ່ານບໍ່ສາມາດທີ່ຈະດື່ມຈາກຈອກຂອງອົງພຣະຜູ້ເປັນເຈົ້າ ແລະ
ດື່ມຈາກຈອກຂອງຜີມານຊາຕານໄດ້. ທ່ານບໍ່ສາມາດກິນຮ່ວມໂຕະຂອງອົງພຣະຜູ້ເປັນເຈົ້າແລະ ຮ່ວມໂຕະຂອງຜີມານຮ້າຍໄດ້ເຊັ່ນກັນ.[22]ຫລື
ພວກເຮົາຈະຍຸຍົງອົງພຣະຜູ້ເປັນເຈົ້າໃຫ້ຫຶງຫວງບໍ? ພວກເຮົາມີກຳລັງຫລາຍກວ່າພຣະອົງບໍ?
[23]"ຂ້າພະເຈົ້າເຮັດສິ່ງສາຣະພັດໄດ້," ແຕ່ບໍ່ແມ່ນທຸກສິ່ງມີປະໂຫຍດ. "ຂ້າພະເຈົ້າເຮັດສິ່ງສາຣະພັດໄດ້" ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໃຫ້ຈະເຣີນຂຶ້ນ.
[24]ບໍ່ຄວນໃຫ້ຜູ້ໃດສະແຫວງຫາຄວາມດີຂອງຕົນເອງ. ແຕ່ໃນທາງກົງກັນຂ້າມ, ແຕ່ລະຄົນຄວນສະແຫວງຫາຄວາມດີຂອງເພື່ອນບ້ານຂອງຕົນ.
[25]ທ່ານອາດຈະກິນໄດ້ທຸກຢ່າງທີ່ຂາຍໃນຕະຫລາດ, ໂດຍບໍ່ຕ້ອງມີຄຳຖາມເລື່ອງໃຈສຳນຶກຜິດແລະຊອບ.
[26]"ເພາະວ່າແຜ່ນດິນໂລກນີ້ເປັນຂອງອົງພຣະຜູ້ເປັນເຈົ້າ, ແລະ ທຸກຢ່າງທັງຫມົດທີ່ຢູ່ໃນນັ້ນດ້ວຍ."[27]ຖ້າຜູ້ບໍ່ເຊື່ອເຊີນທ່ານໄປກິນອາຫານ, ແລະ
ທ່ານຢາກໄປ, ແລ້ວກິນສິ່ງໃດກໍຕາມທີ່ເຂົາກຽມໄວ້ໃຫ້ທ່ານ ໂດຍບໍ່ຕ້ອງຖາມຄຳຖາມເລື່ອງໃຈສຳນຶກຜິດແລະຊອບ.
[28]ແຕ່ຖ້າມີໃຜມາບອກທ່ານວ່າ, "ອາຫານນີ້ເຂົາໄດ້ຖວາຍແກ່ຮູບເຄົາຣົບແລ້ວ," ກໍຢ່າສູ່ກິນອາຫານນັ້ນ. ເພື່ອເຫັນແກ່ຄົນທີ່ບອກກັບທ່ານ, ແລະ
ເຫັນແກ່ໃຈສຳນຶກຜິດ ແລະຊອບ.[29]ຂ້າພະເຈົ້າບໍ່ໄດ້ຫມາຍເຖິງໃຈສຳນຶກຜິດແລະຊອບຂອງທ່ານເອງ, ແຕ່ເປັນໃຈ
ສຳນຶກຜິດແລະຊອບຂອງຄົນອື່ນໆ. ເພາະເປັນຫຍັງເສຣີພາບຂອງຂ້າພະເຈົ້າຄວນຖືກຕັດສິນໂດຍໃຈສຳນຶກຜິດແລະຊອບຂອງຄົນອື່ນ?[30]ຖ້າຂ້າ
ພະເຈົ້າຮ່ວມກິນອາຫານດ້ວຍໃຈຂອບພຣະຄຸນ, ເປັນຫຍັງຂ້າພະເຈົ້າຕ້ອງຖືກຕິຕຽນດ້ວຍ ສິ່ງຊຶ່ງຂ້າພະເຈົ້າໄດ້ຂອບພຣະຄຸນນັ້ນແລ້ວ?
[31]ດັ່ງນັ້ນແຫລະ, ບໍ່ວ່າທ່ານຈະກິນ ຫລື ດື່ມ, ຫລື ເຮັດສິ່ງໃດກໍຕາມ, ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດຂອງພຣະເຈົ້າ.[32]ຢ່າເຮັດໃຫ້ຊາວຢິວ
ຫລື ຊາວກະຣີກ, ຫລື ຄຣິສຕະຈັກຂອງພຣະເຈົ້າສະດຸດໄປ.[33]ຂ້າພະເຈົ້າພະຍາຍາມເຮັດໃຫ້ທຸກຄົນພໍໃຈໃນທຸກສິ່ງ. ຂ້າພະ
ເຈົ້າບໍ່ໄດ້ສະແຫວງຫາຜົນປະໂຫຍດຂອງຕົວເອງ, ແຕ່ເພື່ອປະໂຫຍດຂອງຄົນມາກມາຍ. ຂ້າພະເຈົ້າເຮັດສິ່ງນີ້ເພື່ອພວກເຂົາຈະໄດ້ພົ້ນ.

 generated on Tue Jun 17 19:01:42 2025

11 [1]ຈົ່ງຮຽນແບບຢ່າງຂ້າພະເຈົ້າ, ດັ່ງທີ່ຂ້າພະເຈົ້າຮຽນແບບພຣະຄຣິດ.[2]ບັດນີ້ ຂ້າພະເຈົ້າຂໍຊົມເຊີຍທ່ານທັງຫລາຍ ເພາະທ່ານລະນຶກເຖິງຂ້າ
ພະເຈົ້າໃນທຸກເລື່ອງ. ຂ້າພະເຈົ້າໄດ້ຊົມເຊີຍທ່ານເພາະທ່ານໄດ້ປະຕິບັດຕາມຮີດຄອງປະເພນີຕ່າງໆ ທີ່ຂ້າພະເຈົ້າໄດ້ໃຫ້ພວກທ່ານໄວ້.
[3]ແຕ່ຂ້າພະເຈົ້າຕ້ອງການໃຫ້ພວກທ່ານເຂົ້າໃຈວ່າພຣະຄຣິດຊົງເປັນປະມຸກຂອງຜູ້ຊາຍທຸກຄົນ, ຢ່າງທີ່ຜົວເປັນປະມຸກຂອງເມັຍ, ແລະ
ທີ່ພຣະເຈົ້າເປັນປະມຸກຂອງພຣະຄຣິດ.[4]ດັ່ງນັ້ນຊາຍຄົນໃດທີ່ອະທິຖານ ຫລື ປະກາດພຣະທັມໂດຍການປົກຄຸມຫົວນັ້ນ ເຮັດ
ຄວາມອັບອາຍຕໍ່ພຣະປະມຸກຂອງຕົນ.

[5]ແຕ່ຜູ້ຍິງທີ່ອະທິຖານ ຫລື ປະກາດພຣະທັມໂດຍບໍ່ໄດ້ປົກຄຸມຫົວຂອງນາງ. ກໍເຮັດຄວາມອັບອາຍຕໍ່ຫົວຂອງນາງ.
ແບບດຽວກັນກັບທີ່ນາງແຖຫົວ.[6]ເພາະຖ້າຜູ້ຍິງບໍ່ປົກຄຸມຫົວ, ນາງກໍຄວນຕັດຜົມສັ້ນ. ແຕ່ຖ້າການຕັດຜົມສັ້ນ ຫລື ແຖຜົມເປັນເລື່ອງຫ
ນ້າອັບອາຍ, ກໍໃຫ້ນາງປົກຄຸມຫົວຂອງນາງດີກວ່າ.
[7]ສຳລັບຜູ້ຊາຍ ບໍ່ຄວນປົກຄຸມຫົວເພາະເຂົາເປັນແບບລັກສະນະ ແລະ ສະຫງ່າຣາສີຂອງພຣະເຈົ້າ. ແຕ່ຜູ້ຍິງເປັນສະຫງ່າຣາສີຂອງຜູ້ຊາຍ.
[8]ເພາະວ່າບໍ່ໄດ້ຊົງສ້າງຜູ້ຊາຍຈາກຜູ້ຍິງ. ແຕ່ຊົງສ້າງ, ຜູ້ຍິງຈາກຜູ້ຊາຍ.
[9]ແລະບໍ່ໄດ້ຊົງສ້າງຜູ້ຊາຍໄວ້ສຳລັບຜູ້ຍິງ. ແຕ່ຊົງສ້າງ, ຜູ້ຍິງໄວ້ສຳລັບຜູ້ຊາຍ.[10]ນີ້ຄືເຫດຜົນທີ່ວ່າເປັນຫ
ຍັງຜູ້ຍິງຄວນມີສັນຍາລັກຂອງສິດອຳນາດເຫນືອຫົວຂອງນາງ ເພາະເຫັນແກ່ເຫລົ່າທູດສະຫວັນ
[11]ຢ່າງໃດກໍຕາມ, ໃນອົງພຣະຜູ້ເປັນເຈົ້າ, ຜູ້ຍິງຕ້ອງເພິ່ງຜູ້ຊາຍ, ແລະ ຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ.[12]ເພາະວ່າຜູ້ຍິງແມ່ນມາຈາກຜູ້ຊາຍ, ແລະ
ຜູ້ຊາຍແມ່ນມາຈາກຜູ້ຍິງ. ແລະ ທຸກສິ່ງທຸກຢ່າງແມ່ນມາຈາກພຣະເຈົ້າ.
[13]ຈົ່ງພິຈາຣະນາເອົາເອງວ່າ: ສົມຄວນຫລືບໍ່ທີ່ຜູ້ຍິງຈະອະທິຖານຕໍ່ພຣະເຈົ້າ ໂດຍບໍ່ປົກຄຸມຫົວ?[14]ທັມະຊາດເອງກໍສອນພວກທ່ານບໍ່ແມ່ນບໍ?
ວ່າຖ້າຜູ້ຊາຍໄວ້ຜົມຍາວ, ກໍເປັນເລື່ອງຫນ້າອັບອາຍສຳລັບເຂົາ?[15]ທັມມະຊາດບໍ່ໄດ້ສອນທ່ານບໍ? ວ່າຖ້າຜູ້ຍິງໄວ້ຜົມຍາວ,
ນັ້ນຄືສະຫງ່າຣາສີຂອງນາງ? ເພາະຜົມຂອງນາງຄືສິ່ງທີ່ປົກຄຸມຫົວ.[16]ແຕ່ຖ້າຈະມີບາງຄົນໂຕ້ຖຽງກັນເລື່ອງນີ້, ພວກເຮົາ ແລະ
ຄຣິສຕະຈັກຕ່າງໆຂອງພຣະເຈົ້າ, ບໍ່ມີວິທີການປະຕິບັດອື່ນ.
[17]ແຕ່ໃນຄຳສັ່ງຕ່າງໆຕໍ່ໄປນີ້, ຂ້າພະເຈົ້າຊົມເຊີຍທ່ານບໍ່ໄດ້. ເພາະເມື່ອພວກທ່ານມາປະຊຸມນັ້ນ, ເຮັດໃຫ້ເກີດຜົນເສັຍຫລາຍກວ່າຜົນດີ.
[18]ເປັນຕົ້ນ, ຂ້າພະເຈົ້າໄດ້ຍິນວ່າເມື່ອພວກທ່ານມາປະຊຸມກັນທີ່ຄຣິສຕະຈັກ, ມີການແບ່ງແຍກກັນໃນບັນດາພວກທ່ານ, ແລະ
ຂ້າພະເຈົ້າເຊື່ອວ່າມີມູນຄວາມຈິງ.[19]ເພາະຕ້ອງມີການຂັດແຍ້ງກັນໃນບັນດາພວກທ່ານ,
ເພື່ອຄົນເຫລົ່ານັ້ນທີ່ເປັນຝ່າຍຖືກຕ້ອງຈະໄດ້ປະກົດແຈ້ງຂຶ້ນໃນບັນດາພວກທ່ານ.
[20]ເມື່ອພວກທ່ານໄດ້ມາປະຊຸມກັນນັ້ນ, ບໍ່ໄດ້ເປັນການກິນໃນງານລ້ຽງຂອງອົງພຣະຜູ້ເປັນເຈົ້າ.[21]ເພາະວ່າໃນການກິນອາຫານນັ້ນ,
ແຕ່ລະຄົນຕ່າງກິນອາຫານຂອງຕົນກ່ອນ. ໃນຂະນະທີ່ຄົນຫນຶ່ງກຳລັງຫິວ, ແຕ່ອີກຄົນ ເມົາແລ້ວ.[22]ພວກທ່ານບໍ່ມີເຮືອນທີ່ຈະກິນ ແລະ ດື່ມບໍ?
ຫລື ທ່ານກຳລັງດູຫມິ່ນຄຣິສຕະຈັກຂອງພຣະເຈົ້າ ແລະ ກຳລັງດູຫມິ່ນຄົນເຫລົ່ານັ້ນທີ່ຂັດສົນ? ຂ້າພະເຈົ້າຄວນກ່າວຫຍັງຕໍ່ພວກທ່ານອີກ?
ສົມຄວນບໍ່ທີ່ຈະຊົມເຊີຍທ່ານ? ຂ້າພະເຈົ້າບໍ່ໄດ້ຊົມເຊີຍທ່ານໃນເລື່ອງນີ້!
[23]ເພາະເລື່ອງທີ່ຂ້າພະເຈົ້າໄດ້ຮັບຈາກອົງພຣະຜູ້ເປັນເຈົ້ານັ້ນ ຂ້າພະເຈົ້າໄດ້ມອບໄວ້ກັບພວກທ່ານແລ້ວ,
ຄືໃນຄືນທີ່ຢູດາທໍຣະຍົດພຣະເຢຊູຄຣິດເຈົ້ານັ້ນ, ພຣະອົງຊົງຈັບເອົາເຂົ້າຈີ່ມາ.[24]ເມື່ອໂມທະນາຂອບພຣະຄຸນແລ້ວ, ພຣະອົງຊົງຫັກເຂົ້າຈີ່ ແລະ
ກ່າວວ່າ, "ນີ້ຄືຮ່າງກາຍຂອງເຮົາ, ເຊິ່ງມອບໃຫ້ແກ່ທ່ານທັງຫລາຍ. ຈົ່ງເຮັດສິ່ງນີ້ເພື່ອລະນຶກເຖິງເຮົາ."
[25]ຫລັງຈາກຮັບປະທານເຂົ້າແລງແລ້ວ ພຣະອົງຊົງຈັບເອົາຈອກດ້ວຍອາການຢ່າງດຽວກັນ, ແລະ ກ່າວວ່າ, “ຈອກນີ້ແມ່ນພັນທະສັນຍາໃຫມ່
ດ້ວຍເລືອດຂອງເຮົາ. ຈົ່ງເຮັດສິ່ງນີ້ທຸກຄັ້ງທີ່ທ່ານດື່ມ, ເພື່ອລະນຶກເຖິງເຮົາ.”[26]ເພາະວ່າເມື່ອໃດທີ່ທ່ານກິນເຂົ້າຈີ່ນີ້ ແລະ ດື່ມຈາກຈອກນີ້,
ທ່ານໄດ້ປະກາດການຕາຍຂອງອົງພຣະຜູ້ເປັນເຈົ້າຈົນກວ່າພຣະອົງຈະກັບມາ.
[27]ສະນັ້ນ, ຖ້າຜູ້ໃດ, ກິນເຂົ້າຈີ່ ຫລື ດື່ມຈາກຈອກຂອງອົງພຣະຜູ້ເປັນເຈົ້າຢ່າງບໍ່ຖືກຕ້ອງ, ກໍໄດ້ເຮັດຜິດຕໍ່ພຣະກາຍ ແລະ
ເລືອດຂອງອົງພຣະຜູ້ເປັນເຈົ້າ.[28]ທຸກຄົນຈົ່ງສຳຫລວດຕົວເອງກ່ອນ, ແລ້ວຈຶ່ງກິນເຂົ້າຈີ່ ແລະ ດື່ມຈາກຈອກນີ້.[29]ເພາະວ່າຄົນທີ່ກິນ ແລະ
ດື່ມໂດຍບໍ່ໄດ້ສັງເກດເຖິງພຣະກາຍ, ເຂົາກໍກິນ ແລະ ດື່ມການພິພາກສາຕົວເຂົາເອງ.
[30]ນັ້ນແມ່ນເຫດຜົນທີ່ວ່າເປັນຫຍັງຫລາຍຄົນໃນບັນດາພວກທ່ານອ່ອນແອ ແລະ ເຈັບປ່ວຍ, ແລະ ບາງຄົນກໍລ່ວງຫລັບໄປ.
[31]ແຕ່ຖ້າພວກເຮົາສັງເກດໂຕເອງກ່ອນ, ເຮົາກໍຈະບໍ່ຖືກລົງໂທດ.[32]ແຕ່ເມື່ອອົງພຣະຜູ້ເປັນເຈົ້າຊົງລົງໂທດເຮົານັ້ນ, ພຣະອົງຊົງຕີສອນເຮົາ,
ເພື່ອບໍ່ໃຫ້ຖືກລົງໂທດໄປພ້ອມກັບໂລກ.
[33]ສະນັ້ນ, ພີ່ນ້ອງຂອງຂ້າພະເຈົ້າ, ເມື່ອພວກທ່ານມາປະຊຸມກັນເພື່ອຮັບປະທານອາຫານນັ້ນ, ຈົ່ງລໍຖ້າກັນ ແລະ ກັນ.[34]ຖ້າຜູ້ໃດຫິວ,
ກໍໃຫ້ເຂົາກິນຢູ່ເຮືອນກ່ອນ, ເພື່ອວ່າເມື່ອມາເຕົ້າໂຮມກັນພວກທ່ານຈະບໍ່ຖືກລົງໂທດ. ສ່ວນເປັນປະເດັນອື່ນໆ ທີ່ທ່ານຂຽນມານັ້ນ,
ຂ້າພະເຈົ້າຈະໃຫ້ຄຳແນະນຳຕ່າງໆເມື່ອຂ້າພະເຈົ້າມາ.


generated on Tue Jun 17 19:01:42 2025

12 1ພີ່ນ້ອງທັງຫລາຍ, ຂ້າພະເຈົ້າຢາກໃຫ້ທ່ານເຂົ້າໃຈ. ກ່ຽວກັບຂອງປະທານຕ່າງໆຝ່າຍວິນຍານ,
2ພວກທ່ານຮູ້ບໍ່ວ່າແຕ່ກ່ອນທ່ານຍັງເປັນຄົນທີ່ບໍ່ເຊື່ອ, ທ່ານຖືກນຳໃຫ້ຫລົງໄປນັບຖືຮູບເຄົາຣົບເຊິ່ງເວົ້າບໍ່ໄດ້,
ແລ້ວແຕ່ວ່າພວກມັນຈະພາທ່ານໄປທາງໃດ.3ສະນັ້ນ ຂ້າພະເຈົ້າຕ້ອງການໃຫ້ພວກທ່ານຮູ້ວ່າ
ບໍ່ມີຜູ້ໃດທີ່ເວົ້າໂດຍພຣະວິນຍານຂອງພຣະເຈົ້າຈະເວົ້າວ່າ, "ພຣະເຢຊູຄຣິດເຈົ້າຖືກສາບແຊ່ງ" ບໍ່ມີໃຜສາມາດເວົ້າວ່າ
"ພຣະເຢຊູຄຣິດເຈົ້າຄືອົງພຣະຜູ້ເປັນເຈົ້າ" ນອກຈາກຈະເວົ້າໂດຍພຣະວິນຍານບໍຣິສຸດ.

4ຂອງປຣະທານນັ້ນມີແຕກຕ່າງກັນ, ແຕ່ມີພຣະວິນຍານອົງດຽວກັນ.5ການຮັບໃຊ້ນັ້ນມີແຕກຕ່າງກັນ, ແຕ່ມີອົງພຣະຜູ້ເປັນເຈົ້າອົງດຽວກັນ;6ແລະ
ການດຳເນີນງານນັ້ນມີແຕກຕ່າງກັນ, ແຕ່ມີອົງພຣະຜູ້ເປັນເຈົ້າອົງດຽວຊຶ່ງເປັນສາເຫດແຫ່ງການດຳເນີນງານຕ່າງໆໃນທຸກຄົນ.
7ການສຳແດງຂອງພຣະວິນຍານບໍຣິສຸດນັ້ນ ພຣະອົງປະທານໃຫ້ແຕ່ລະຄົນເພື່ອປະໂຫຍດຮ່ວມກັນ.8ເພາະໂດຍຜ່ານທາງພຣະວິນຍານບໍຣິສຸດ ຊຶ
ງໃຫ້ຄົນຫນຶ່ງມີຖ້ອຍຄຳແຫ່ງປັນຍາ, ອີກຄົນຫນຶ່ງມີຖ້ອຍຄຳແຫ່ງຄວາມຮູ້ ໂດຍພຣະວິນຍານອົງດຽວກັນ.
9ໃຫ້ຄົນຫນຶ່ງມີຄວາມເຊື່ອ, ໂດຍພຣະວິນຍານອົງດຽວກັນ ແລະ ໃຫ້ອີກຄົນຫນຶ່ງມີຂອງປຣະທານໃນການຮັກສາພະຍາດ
ໂດຍພຣະວິນຍານອົງດຽວກັນ.10ໃຫ້ອີກຄົນຫນຶ່ງມີຣິດອຳນາດເຮັດການອັດສະຈັນ, ໃຫ້ອີກຄົນຫນຶ່ງປະກາດພຣະທັມ, ໃຫ້ອີກຄົນຫ
ນຶ່ງມີຄວາມສາມາດສັງເກດເບິ່ງວິນຍານຕ່າງໆ, ໃຫ້ອີກຄົນຫນຶ່ງເວົ້າພາສາແປກໆ, ແລະ ໃຫ້ອີກຄົນຫນຶ່ງແປພາສາແປກໆໄດ້.
11ສິ່ງສາຣະພັດເຫລົ່ານີ້ແມ່ນພຣະວິນຍານອົງດຽວກັນຊຶ່ງທຳການ, ແລະ ມອບຂອງປຣະທານເຫລົ່ານີ້ທັງຫມົດໃຫ້ແຕ່ລະຄົນ, ຕາມທີ່ພຣະອົງ
ໄດ້ຊົງເລືອກໄວ້.
12ເພາະວ່າເຫມືອນກັບຮ່າງກາຍດຽວທີ່ມີຫລາຍໆ ອະໄວຍະວະ ແລະ ອະໄວຍະວະທັງຫມົດເປັນຂອງຮ່າງກາຍດຽວກັນ,
ເຊັ່ນດຽວກັນກັບພຣະຄຣິດເຈົ້າ.13ເພາະວ່າບໍ່ວ່າຈະເປັນຊາວຢິວ, ຫລື ຊາວກະຣີກ, ເປັນຂ້າທາດ ຫລື ເປັນອິສຣະ, ເຮົາໄດ້ຮັບບັບຕິສະມາໃນພ
ຣະວິນຍານອົງດຽວເຂົ້າເປັນກາຍດຽວກັນ, ແລະ ຊົງສ້າງເຮົາທຸກຄົນໃຫ້ດື່ມຈາກພຣະວິນຍານອົງດຽວກັນ.
14ເພາະວ່າຮ່າງກາຍບໍ່ໄດ້ປະກອບດ້ວຍອະໄວຍະວະດຽວ, ແຕ່ດ້ວຍຫລາຍອະໄວຍະວະ.15ຖ້າຕີນຈະເວົ້າວ່າ, "ເພາະຂ້ອຍບໍ່ໄດ້ເປັນມື,
ຂ້ອຍຈຶ່ງບໍ່ແມ່ນອະໄວຍະວະຂອງຮ່າງກາຍ," ບໍ່ມີພາກສ່ວນໃດທີ່ຕ່ຳກວ່າໃນຮ່າງກາຍ.16ແລະ ຖ້າຫູຈະເວົ້າວ່າ, "ເພາະຂ້ອຍບໍ່ໄດ້ເປັນຕາ,
ຂ້ອຍຈຶ່ງບໍ່ແມ່ນອະໄວຍະວະຂອງຮ່າງກາຍ," ບໍ່ມີພາກສ່ວນໃດທີ່ຕ່ຳກວ່າໃນຮ່າງກາຍ.17ຖ້າຮ່າງກາຍທັງຫມົດ ເປັນຕາ, ການໄດ້ຍິນຈະຢູ່ບ່ອນ
ໃດ? ຖ້າຮ່າງກາຍທັງຫມົດເປັນຫູ, ການດົມກິ່ນຈະຢູ່ບ່ອນໃດ?
18ແຕ່ວ່າພຣະເຈົ້າຊົງຕັ້ງອະໄວຍະວະ ແຕ່ລະອະໄວຍະວະໄວ້ໃນແຕ່ລະສ່ວນຂອງຮ່າງກາຍຕາມທີ່ພຣະອົງຊົງອອກແບບໄວ້.
19ຖ້າອະໄວຍະວະທຸກສ່ວນໃນຮ່າງກາຍເປັນອັນດຽວກັນ, ຮ່າງກາຍຈະມີຢູ່ໃສ?20ສະນັ້ນ ຈຶ່ງມີອະໄວຍະວະຫລາຍຢ່າງ
ແຕ່ມີພຽງຮ່າງກາຍດຽວ.
21ຕາກໍ່ບໍ່ສາມາດເວົ້າກັບມືວ່າ, "ຂ້ອຍບໍ່ຕ້ອງການເຈົ້າ." ຫລື ຫົວຈະເວົ້າກັບຕີນ,
"ຂ້ອຍບໍ່ຕ້ອງການເຈົ້າ."22ແຕ່ຫລາຍໆອະໄວຍະວະທີ່ເຮົາຄິດວ່າອ່ອນແອກວ່າ ກໍ່ຍັງມີຄວາມຈຳເປັນ,23ອະໄວຍະວະຂອງຮ່າງກາຍທີ່ເຮົາ
ຄິດວ່າບໍ່ມີກຽດ, ເຮົາຕ້ອງໃຫ້ກຽດຫລາຍຂຶ້ນ. ແລະ ອະໄວຍະວະທີ່ຕ້ອງປົກປິດ, ກໍ່ຕ້ອງໃຫ້ກຽດຕື່ມອີກ.24ເພາະວ່າອະໄວຍະວະທີ່ເປັນຕາ
ເບິ່ງຢູ່ແລ້ວ, ກໍ່ບໍ່ຈຳເປັນຕ້ອງຕົບແຕ່ງອີກ. ເພາະພວກເຂົາມີຄວາມສະຫງ່າງາມຢູ່ແລ້ວ. ແຕ່ພຣະເຈົ້າຊົງຈັດວາງອະໄວຍະວະຕ່າງໆເຂົ້ານຳກັນ,
ແລະ ໄດ້ຊົງປະທານກຽດຫລາຍຂຶ້ນແກ່ອະໄວຍະວະຕ່າງໆເຫລົ່ານັ້ນທີ່ຕ່ຳຕ້ອຍ.
25ພຣະອົງຊົງເຮັດສິ່ງນີ້ເພື່ອບໍ່ໃຫ້ມີການແບ່ງແຍກກັນໃນຮ່າງກາຍ, ແຕ່ໃຫ້ອະໄວຍະວະຕ່າງໆ ມີຄວາມຫວ່ງໃຍກັນ ແລະ
ກັນດ້ວຍຄວາມຮັກແບບດຽວກັນ.26ເມື່ອອະໄວຍະວະຫນຶ່ງທຸກ, ອະໄວຍະວະທັງຫມົດກໍ່ຮ່ວມທຸກນຳ; ຫລື ເມື່ອອະໄວຍະວະຫນຶ່ງ ໄດ້ຮັບກຽດ,
ອະໄວຍະວະທັງຫມົດກໍ່ປິຕິຍິນດີນຳ.27ສ່ວນທ່ານທັງຫລາຍເປັນຮ່າງກາຍຂອງພຣະຄຣິດ ແລະ ແຕ່ອະໄວຍະວະກໍ່ເປັນສ່ວນ ຫ
ນຶ່ງຂອງຮ່າງກາຍນັ້ນ.
28ແລະ ພຣະເຈົ້າໄດ້ຊົງຕັ້ງບາງຄົນໄວ້ໃນຄຣິສຕະຈັກ ຄືຫນຶ່ງ ແມ່ນອັກຄະສາວົກ, ສອງແມ່ນຜູ້ປະກາດພຣະທັມ, ສາມ ແມ່ນອາຈານ,
ຫລັງຈາກນັ້ນ ຜູ້ເຮັດການອິດທິຣິດຕ່າງໆ, ຫລັງຈາກນັ້ນຂອງປຣະທານແຫ່ງການຮັກສາພະຍາດ, ພວກທີ່ໃຫ້ຄວາມຊ່ວຍເຫລືອ,
ພວກທີ່ເຮັດວຽກໃນການຄຸ້ມຄອງ, ແລະ ພວກທີ່ເວົ້າພາສາແປກໆຊະນິດຕ່າງໆ.29ທຸກຄົນເປັນອັກຄະສາວົກບໍ່? ທຸກຄົນເປັນຜູ້ທຳນວາຍບໍ່?
ທຸກຄົນເປັນອາຈານບໍ່? ທຸກຄົນເປັນຜູ້ເຮັດການດ້ວຍຣິດອຳນາດບໍ່?
30ທຸກຄົນມີຂອງປຣະທານສຳລັບການຮັກສາພະຍາດບໍ່? ທຸກຄົນເວົ້າພາສາແປກໆບໍ່? ທຸກຄົນແປພາສາແປກໆບໍ່?
31ຈົ່ງພະຍາຍາມຊອກຫາຂອງປຣະທານຕ່າງໆ. ທີ່ຍິ່ງໃຫຍ່ກວ່າ ແລະ ຂ້າພະເຈົ້າຈະຊີ້ທາງໃຫ້ພວກທ່ານເຫັນເຖິງທາງທີ່ດີເລີດກວ່ານັ້ນອີກ.


generated on Tue Jun 17 19:01:42 2025

# 13

1ເຖິງແມ່ນວ່າຂ້າພະເຈົ້າເວົ້າເປັນພາສາແປກ ທີ່ເປັນພາສາຂອງມະນຸດ ແລະ ທູດສະຫວັນໄດ້. ແຕ່ບໍ່ມີຄວາມຮັກ, ຂ້າພະເຈົ້າກໍ່ເປັນຄືກັບຄ້ອງ
ຫລື ແຊ່ງ ທີ່ສົ່ງສຽງດັງ. 2ເຖິງແມ່ນວ່າຂ້າພະເຈົ້າມີຂອງປະທານໃນການປະກາດພຣະທັມ ແລະ ເຂົ້າໃຈຄວາມຈິງ ແລະ ຄວາມຮູ້ທັງຫມົດ,
ທີ່ຖືກປິດບັງໄວ້ ແລະ ເຖິງແມ່ນວ່າຂ້າພະເຈົ້າມີຄວາມເຊື່ອທີ່ຍ້າຍພູເຂົາໄດ້ ແຕ່ບໍ່ມີຄວາມຮັກ, ຂ້າພະເຈົ້າກໍ່ບໍ່ມີຄ່າອັນໃດ.
3ແລະເຖິງແມ່ນຂ້າພະເຈົ້າໄດ້ບໍຣິຈາກທັງຫມົດທີ່ຂ້າພະເຈົ້າມີເພື່ອລ້ຽງຄົນຍາກຈົນ, ແລະເຖິງແມ່ນວ່າໃຫ້ຮ່າງກາຍຂອງຂ້າພະເຈົ້າໄປເຜົາໄຟ.
ແຕ່ຖ້າບໍ່ມີຄວາມຮັກ ຂ້າພະເຈົ້າກໍ່ບໍ່ມີຄ່າອັນໃດ.

4ຄວາມຮັກຄືຄວາມອົດທົນດົນນານ ຄວາມຮັກຄືຄວາມເມດຕາກະຣຸນາ. ຄວາມຮັກບໍ່ອິດສາ, ບໍ່ໂອ້ອວດ, ບໍ່ຈອງຫອງ 5ບໍ່ເຮັດການອັນບໍ່ສຸພາບ.
ບໍ່ເຫັນແກ່ຕົວ. ບໍ່ໃຈຮ້າຍ, ບໍ່ຈົດຈຳຄວາມຜິດ. 6ບໍ່ຊື່ນຊົມຍິນດີໃນຄວາມ ອະທັມ. ແຕ່ຊື່ນຊົມຍິນດີໃນຄວາມຈິງ. 7ຄວາມຮັກສູ້ທົນໄດ້ທຸກສິ່ງ,
ເຊື່ອທຸກສິ່ງ, ມີຄວາມຫວັງ ແລະ ຄວາມອົດທົນຢູ່ສະເຫມີ
8ຄວາມຮັກບໍ່ເຄີຍສູນຫາຍໄປ. ເຖິງແມ່ນວ່າການປະກາດພຣະທັມຈະຊຸດໂຊມລົງ, ເຖິງແມ່ນວ່າການເວົ້າພາສາແປກໆຈະຢຸດການເວົ້າ,
ເຖິງແມ່ນວ່າຄວາມຮູ້ຈະສູນຫາຍໄປກໍ່ຕາມ. 9ເພາະວ່າເຮົາຮູ້ພຽງບາງສ່ວນ ແລະ ກໍ່ປະກາດພຣະທັມພຽງແຕ່ບາງສ່ວນ.
10ແຕ່ເມື່ອຄວາມສົມບູນມາເຖິງ ສິ່ງທີ່ບໍ່ສົມບູນຈະສູນຫາຍໄປ.
11ຕອນທີ່ຂ້າພະເຈົ້າຍັງນ້ອຍ, ຂ້າພະເຈົ້າເວົ້າຄືກັບເດັກນ້ອຍ, ຄິດຄືກັບເດັກນ້ອຍ, ຫາເຫດຜົນຄືກັບເດັກນ້ອຍ. ແຕ່ເມື່ອຂ້າພະເຈົ້າເປັນຜູ້ໃຫຍ່,
ຂ້າພະເຈົ້າກໍ່ເຊົາປະພຶດອາການຄືກັບເດັກນ້ອຍ. 12ເພາະວ່າເວລານີ້ເຮົາເຫັນພໍມົວໆຄືກັບເບິ່ງໃນແວ່ນ, ແຕ່ຕໍ່ມາແມ່ນຈະເຫັນແບບຫນ້າ ຕໍ່ ຫນ້າ.
ເວລານີ້ຂ້າພະເຈົ້າຮູ້ພຽງບາງສ່ວນ, ແຕ່ຕໍ່ມາຂ້າພະເຈົ້າຈະຮູ້ແຈ້ງຄືກັບທີ່ພຣະອົງຮູ້ຈັກຂ້າພະເຈົ້າ. 13ແຕ່ບັດນີ້ຍັງຕັ້ງຢູ່ສາມສິ່ງຄື: ຄວາມເຊື່ອ,
ຄວາມຫມັ້ນໃຈໃນອະນາຄົດ, ແລະ ຄວາມຮັກ. ແຕ່ຄວາມຮັກນັ້ນແມ່ນໃຫຍ່ທີ່ສຸດໃນສາມສິ່ງນີ້.

14 1ຈົ່ງຕັ້ງຈຸດມຸ້ງຫມາຍຫາຄວາມຮັກ ແລະ ພະຍາຍາມຊອກຫາຂອງປະທານຝ່າຍວິນຍານ, ໂດຍສະເພາະການປະກາດ ພຣະທັມ.
2ເພາະວ່າຄົນທີ່ເວົ້າພາສາແປກໆນັ້ນ ບໍ່ໄດ້ເວົ້າກັບມະນຸດ ແຕ່ກ່າວຕໍ່ພຣະເຈົ້າ. ບໍ່ມີໃຜເຂົ້າໃຈເຂົາ
ເພາະເຂົາໄດ້ເວົ້າສິ່ງທີ່ເປັນຄວາມເລິກເຊິ່ງໃນພຣະວິນຍານ. 3ແຕ່ຜູ້ທີ່ປະກາດພຣະທັມນັ້ນ ເວົ້າກັບມະນຸດເພື່ອໃຫ້ພວກເຂົາເຕີບໃຫຍ່ຂຶ້ນ,
ເພື່ອຫນູນໃຈ ແລະ ໃຫ້ກຳລັງໃຈພວກເຂົາ, 4ຄົນທີ່ເວົ້າພາສາແປກໆນັ້ນ ເຮັດໃຫ້ໂຕເອງເຕີບໃຫຍ່ຂຶ້ນ, ແຕ່ຜູ້ທີ່ປະກາດ
ພຣະທັມເຮັດໃຫ້ຄຣິສຕະຈັກຈະເຣີນຂຶ້ນ.

5ຂ້າພະເຈົ້າຕ້ອງການໃຫ້ພວກທ່ານທຸກຄົນເວົ້າພາສາແປກໆ. ແຕ່ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າຕ້ອງການໃຫ້ພວກທ່ານປະກາດພຣະທັມ.
ຄົນທີ່ປະກາດພຣະທັມນັ້ນໃຫຍ່ກວ່າຄົນທີ່ເວົ້າພາສາແປກໆ (ນອກຈາກວ່າມີຄົນແປ ຄຣິສຕະຈັກກໍ່ຈະເຣີນຂຶ້ນ.) 6ແຕ່ວ່າ, ພີ່ນ້ອງທັງຫລາຍ,
ຖ້າຂ້າພະເຈົ້າມາຫາທ່ານ ແລະ ເວົ້າພາສາແປກໆ, ຈະເປັນປະໂຫຍດຫຍັງຕໍ່ທ່ານ? ຂ້າພະເຈົ້າບໍ່ສາມາດເປັນປະໂຫຍດຫຍັງເລີຍ,
ຖ້າຂ້າພະເຈົ້າບໍ່ເວົ້າກັບພວກທ່ານໂດຍການສຳແດງ, ຫລື ຄວາມຮູ້, ຫລື ປະກາດພຣະທັມ, ຫລື ຄຳສອນ.
7ເຖິງແມ່ນວ່າເຄື່ອງດົນຕຣີທີ່ບໍ່ມີຊີວິດຍັງມີສຽງໄດ້ເຊັ່ນປີ່ຫລືພິນຖ້າເຄື່ອງດົນຕຣີພວກນັ້ນບໍ່ເຮັດສຳນຽງສຽງແຕກຕ່າງກັນ,
ໃຜຈະຮູ້ໄດ້ແນວໃດວ່າປີ່ ຫລື ພິນນັ້ນກຳລັງບັນເລງທຳນອງແນວໃດ? 8ຖ້າສຽງແກດັງບໍ່ຈະແຈ້ງ,
ໃຜຈະຮູ້ໄດ້ແນວໃດວ່າຮອດເວລາກຽມພ້ອມສຳລັບສູ້ຮົບ? 9ສະນັ້ນ ເປັນເລື່ອງຂອງພວກທ່ານ. ຖ້າທ່ານສົ່ງສຽງທີ່ບໍ່ສາມາດເຂົ້າໃຈໄດ້,
ໃຜຈະເຂົ້າໃຈວ່າທ່ານເວົ້າຫຍັງ? ທ່ານເວົ້າ, ແຕ່ບໍ່ມີໃຜເຂົ້າໃຈທ່ານ.
10ໃນໂລກນີ້ມີຫລາຍພາສາແຕກຕ່າງແນ່ນອນ, ແລະບໍ່ມີພາສາໃດທີ່ບໍ່ມີຄວາມຫມາຍ. 11ແຕ່ຖ້າຂ້າພະເຈົ້າບໍ່ຮູ້ຄວາມຫມາຍຂອງພາສານັ້ນ,
ຂ້າພະເຈົ້າກໍ່ເປັນຄົນຕ່າງພາສາຕໍ່ຄົນທີ່ເວົ້າພາສານັ້ນ, ແລະ ຄົນທີ່ເວົ້າພາສານັ້ນກໍ່ເປັນຄົນຕ່າງພາສາຕໍ່ຂ້າພະເຈົ້າ
12ທ່ານທັງຫລາຍກໍ່ເປັນແບບນັ້ນຄືກັນ. ຖ້າທ່ານຮ້ອນໃຈຕໍ່ການສຳແດງຂອງພຣະວິນຍານ,
ຈົ່ງສະແຫວງຫາເຮັດໃຫ້ຄຣິສຕະຈັກເຕັມໄປດ້ວຍຄວາມຈະເຣີນຂຶ້ນ. 13ສະນັ້ນ ຄົນທີ່ເວົ້າພາສາແປກໆ
ຄວນອະທິຖານຂໍໃຫ້ເຂົາແປພາສາໄດ້ຄືກັນ. 14ເພາະຖ້າຂ້າພະເຈົ້າອະທິຖານເປັນພາສາແປກໆ, ຈິດວິນຍານຂອງຂ້າພະເຈົ້າກຳລັງອະທິຖານ,
ແຕ່ຄວາມຄິດຂອງຂ້າພະເຈົ້າກໍ່ບໍ່ໄດ້ປະໂຫຍດ.
15ຂ້າພະເຈົ້າຕ້ອງເຮັດອັນໃດ? ຂ້າພະເຈົ້າຈະອະທິຖານດ້ວຍຈິດວິນຍານກໍ່ຈິງ. ແລະດ້ວຍຄວາມຄິດຂອງຂ້າພະເຈົ້າເຊັ່ນດຽວກັນ.
ຂ້າພະເຈົ້າຈະຮ້ອງເພງດ້ວຍວິນຍານ, ແລະ ດ້ວຍຄວາມຄິດຂອງຂ້າພະເຈົ້າເຊັ່ນດຽວກັນ. 16ບໍ່ດັ່ງນັ້ນ,
ຖ້າທ່ານສັນຣະເສີນພຣະເຈົ້າດ້ວຍວິນຍານ, ຄົນພາຍນອກຈະເວົ້າວ່າ "ອາແມນ" ໄດ້ແນວໃດໃນຂະນະທີ່ທ່ານກຳລັງຂອບພຣະຄຸນ
ຖ້າເຂົາບໍ່ຮູ້ວ່າທ່ານກຳລັງເວົ້າຫຍັງ?
17ເຖິງແມ່ນວ່າຄຳໂມທະນາຂອບພຣະຄຸນພຣະເຈົ້າຂອງທ່ານດັກດີ, ແຕ່ບໍ່ໄດ້ເຮັດໃຫ້ຄົນອື່ນຈະເຣີນຂຶ້ນ.
18ຂ້າພະເຈົ້າຂອບພຣະຄຸນພະເຈົ້າທີ່ຂ້າພະເຈົ້າເວົ້າພາສາແປກໆຫລາຍກ່ວາທ່ານທັງຫລາຍ. 19ແຕ່ໃນຄຣິສຕະຈັກ
ຂ້າພະເຈົ້າຕ້ອງການເວົ້າພຽງຫ້າຄຳດ້ວຍຄວາມເຂົ້າໃຈເພື່ອສອນຄົນອື່ນ, ກໍ່ດີກວ່າທີ່ຈະເວົ້າຫລາຍສິບພັນຄຳເປັນພາສາທີ່ແປກໆ.
20ພີ່ນ້ອງທັງຫລາຍ, ຢ່າເປັນເດັກໃນດ້ານຄວາມຄິດ. ແຕ່ໃນເລື່ອງ, ຄວາມຊົ່ວຮ້າຍ, ຈົ່ງເປັນຄືກັບເດັກອ່ອນ.
ແຕ່ໃນດ້ານຄວາມຄິດນັ້ນຈົ່ງເປັນຜູ້ໃຫຍ່. 21ໃນກົດບັນຍັດມີຂຽນໄວ້ວ່າ, "ເຮົາຈະເວົ້າກັບຊົນຊາດນີ້ດ້ວຍຄົນຕ່າງພາສາ ແລະ
ດ້ວຍຮີມສົບຂອງຄົນແປກຫນ້າ. ແມ່ນວ່າພວກເຂົາຈະບໍ່ຟັງເຮົາ, "ອົງພຣະຜູ້ເປັນເຈົ້າກ່າວໄວ້ດັ່ງນີ້.
22ສະນັ້ນ, ການເວົ້າໃນພາສາແປກໆ, ຈຶ່ງບໍ່ແມ່ນຫມາຍສຳຄັນສຳລັບພວກທີ່ເຊື່ອ, ແຕ່ສຳລັບພວກທີ່ບໍ່ເຊື່ອ, ແຕ່ການປະກາດພຣະທັມນັ້ນ,
ບໍ່ແມ່ນຫມາຍສຳຄັນສຳລັບພວກທີ່ບໍ່ເຊື່ອ, ແຕ່ ສຳລັບພວກທີ່ເຊື່ອ. 23ສະນັ້ນ, ຖ້າ, ທັງຄຣິສຕະຈັກມາປະຊຸມກັນ ແລະ
ທຸກຄົນຕ່າງກໍ່ເວົ້າພາສາແປກໆ, ແລະ ມີຄົນພາຍນອກ ແລະ ຄົນບໍ່ເຊື່ອຖືກເຂົ້າມາ, ພວກເຂົາບໍ່ຄິດວ່າພວກທ່ານເປັນບ້າບໍ?
24ແຕ່ຖ້າທຸກຄົນປະກາດພຣະທັມ ແລະ ຄົນບໍ່ເຊື່ອ ຫລື ຄົນນອກເຂົ້າມາ, ເຂົາຈະສຳນຶກບາບດ້ວຍກັບສິ່ງທີ່ໄດ້ຟັງໄປທັງຫມົດນັ້ນ.
ເຂົາຈະຖືກກວດກາໂດຍສິ່ງທີ່ໄດ້ເວົ້າໄປນັ້ນ. 25ຄວາມລັບໃນໃຈຂອງເຂົາຈະຖືກເປີດເຜີຍ. ສິ່ງຜົນໃຫ້, ພວກເຂົາຫມູບຫນ້າລົງແລະ
ນະມັດສະການພຣະເຈົ້າ. ເຂົາຈະປະກາດວ່າພຣະເຈົ້າສະຖິດທ່າມກາງພວກທ່ານແທ້ ໆ.
26ເພາະສະນັ້ນ, ພີ່ນ້ອງທັງຫລາຍຈະເວົ້າແນວໃດ? ເມື່ອພວກທ່ານມາປະຊຸມກັນ, ແຕ່ລະຄົນກໍ່ມີເພງສັນຣະເສີນ, ມີຄຳສອນ,
ການສະແດງອອກ, ມີພາສາແປກໆ, ຫລື ມີການແປ. ຈົ່ງທຸກຢ່າງເພື່ອໃຫ້ຄຣິສຕະຈັກຈະເຣີນຂຶ້ນ. 27ຖ້າຜູ້ໃດຈະເວົ້າພາສາແປກໆ,
ຈົ່ງໃຫ້ເວົ້າພຽງສອງຄົນ ຫລື ຢ່າງຫລາຍສາມຄົນ, ແລະ ໃຫ້ເວົ້າເທື່ອລະຄົນ, ແລ້ວໃຫ້ອີກຄົນຫນຶ່ງແປ. 28ແຕ່ຖ້າບໍ່ມີໃຜແປ,
ກໍ່ໃຫ້ເຂົາມິດຢູ່ໃນຄຣິສຕະຈັກ. ໃຫ້ເວົ້າກັບໂຕເອງຕາມລຳພັງ ແລະ ກ່າວຕໍ່ພຣະເຈົ້າ.
29ໃຫ້ພວກຜູ້ປະກາດພຣະທັມ ເວົ້າໄດ້ສອງ ຫລື ສາມຄົນ, ແລະ ໃຫ້ຄົນອື່ນໆ ກວດກາສິ່ງທີ່ເວົ້າ. 30ແລະ
ຖ້າມີການຊົງສຳແດງຕໍ່ຄົນອື່ນທີ່ນັ່ງຢູ່ໃນກອງປະຊຸມນຳ, ກໍ່ໃຫ້ຄົນທຳອິດນັ້ນມິດໄວ້ກ່ອນ.
31ເພາະພວກທ່ານສາມາດປະກາດພຣະທັມ ໄດ້ເທື່ອລະຄົນ ເພື່ອໃຫ້ແຕ່ລະຄົນໄດ້ຮຽນຮູ້ ແລະ ໄດ້ຮັບການເສີມສ້າງ.
32ເພາະວິນຍານຂອງພວກຜູ້ປະກາດພຣະທັມນັ້ນ ຢູ່ໃຕ້ການບັງຄັບຂອງພວກຜູ້ປະກາດພຣະທັມ.
33ເພາະວ່າພຣະເຈົ້າບໍ່ແມ່ນພຣະເຈົ້າແຫ່ງຄວາມວຸ່ນວາຍ, ແຕ່ເປັນພຣະເຈົ້າແຫ່ງສັນຕິສຸກ.
ດັ່ງທີ່ເປັນຢູ່ໃນຄຣິສຕະຈັກທຸກແຫ່ງຂອງບັນດາຜູ້ທີ່ເຊື່ອ.
34ຈົ່ງໃຫ້ບັນດາຜູ້ຍິງຢູ່ມິດໆໃນຄຣິສຕະຈັກ. ເພາະພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ເວົ້າ, ແຕ່ໃຫ້ມີຄວາມຖ່ອມຕົວ, ຄືກັບທີ່ກົດບັນຍັດກ່າວໄວ້.
35ຖ້າພວກເຂົາຕ້ອງການຮຽນຮູ້ຫຍັງ, ກໍ່ໃຫ້ຖາມສາມີຂອງຕົນຢູ່ເຮືອນ. ເພາະວ່າການທີ່ຜູ້ຍິງທີ່ຈະເວົ້າໃນຄຣິສຕະຈັກນັ້ນເປັນເລື່ອງຫນ້າອາຍ.
36ເພາະຖ້ອຍຄຳຂອງພຣະເຈົ້າມາຈາກພວກທ່ານບໍ? ຖ້ອຍຄຳມາຮອດທ່ານພວກດຽວບໍ?
37ຖ້າໃຜຄິດວ່າຕົນເປັນຜູ້ປະກາດ ພຣະທັມ ຫລື ເປັນຄົນຝ່າຍວິນຍານ, ກໍ່ຈົ່ງຍອມຮັບວ່າ ຂໍ້ຄວາມທີ່ຂ້າພະເຈົ້າຂຽນມາເຖິງພວກທ່ານນັ້ນ
ເປັນພຣະບັນຍັດຂອງພຣະຜູ້ເປັນເຈົ້າ. 38ແຕ່ຖ້າຜູ້ໃດບໍ່ສົນໃຈໃນຂໍ້ຄວາມນີ້, ຄົນນັ້ນກໍ່ຈະບໍ່ໄດ້ຮັບການເອົາໃຈໃສ່.
39ສະນັ້ນ, ພີ່ນ້ອງທັງຫລາຍ, ຈົ່ງສະແຫວງຫາການປະກາດພຣະທັມ, ແລະ ຢ່າຫ້າມການເວົ້າພາສາແປກໆ. 40ແຕ່ໃຫ້ເຮັດທຸກສິ່ງຢ່າງຖືກຕ້ອງ
ແລະ ເປັນຣະບຽບ.

15 1ພີ່ນ້ອງທັງຫລາຍ, ຂ້າພະເຈົ້າຂໍໃຫ້ຄຳນຶງເຖິງ, ຂ່າວປະເສີດທີ່ຂ້າພະເຈົ້າເຄີຍໄດ້ປະກາດກັບທ່ານທັງຫລາຍນັ້ນ, ພວກທ່ານໄດ້ຮັບໄວ້
ແລະ ໄດ້ຕັ້ງຫມັ້ນຢູ່ເທິງນັ້ນແລ້ວ.2ທ່ານໄດ້ຮັບຄວາມພົ້ນໂດຍທາງຂ່າວປະເສີດນີ້,
ຖ້າພວກທ່ານຍັງຍຶດຫມັ້ນໃນຄຳທີ່ຂ້າພະເຈົ້າປະກາດນັ້ນ, ບໍດັ່ງນັ້ນທ່ານກໍຈະເຊື່ອຢ່າງບໍ່ມີປະໂຫຍດ.

3ເພາະວ່າຂ້າພະເຈົ້າໄດ້ມອບເລື່ອງສຳຄັນທີ່ສຸດທີ່ຂ້າພະເຈົ້າໄດ້ຮັບມານັ້ນແກ່ພວກທ່ານ: ຄືພຣະຄຣິດເຈົ້າຊົງສິ້ນພຣະຊົນ ເພາະບາບຂອງເຮົາ
ຕາມທີ່ຂຽນໄວ້ໃນພຣະຄັມພີ,4ແລະ ຊົງຖືກຝັງ, ແລ້ວໃນມື້ທີ່ສາມຊົງຖືກເຮັດໃຫ້ຟື້ນຄືນມາ ຕາມທີ່ຂຽນໄວ້ໃນພຣະຄັມພີ.
5ພຣະອົງຊົງປະກົດຕົວຕໍ່ ເປໂຕ, ແລ້ວຕໍ່ອັກຄະສາວົກສິບສອງຄົນ;
6ຕໍ່ຈາກນັ້ນພຣະອົງຊົງໄດ້ປະກົດຕົວຕໍ່ພີ່ນ້ອງກວ່າຫ້າຮ້ອຍຄົນໃນເວລາດຽວກັນ. ທີ່ສ່ວນຫລາຍຍັງມີຊີວິດຢູ່ຈົນຮອດປະຈຸບັນນີ້,
ແຕ່ບາງຄົນກໍລ່ວງລັບໄປແລ້ວ.7ຕໍ່ຈາກນັ້ນ ພຣະອົງຊົງປະກົດຕົວຕໍ່ຢາໂກໂບ, ແລ້ວຕໍ່ອັກຄະສາວົກທັງຫມົດ.
8ຫລັງສຸດ, ພຣະອົງຈະຊົງປະກົດຕົວຕໍ່ຂ້າພະເຈົ້າ, ຜູ້ເປັນເຫມືອນເດັກນ້ອຍທີ່ເກີດຜິດເວລາ.9ເພາະວ່າຂ້າພະເຈົ້າເປັນຜູ້
ເລັກນ້ອຍທີ່ສຸດໃນອັກຄະສາວົກ. ແລະ ບໍ່ສົມຄວນທີ່ຈະຖືກເອີ້ນວ່າເປັນອັກຄະສາວົກ ເພາະວ່າຂ້າພະເຈົ້າໄດ້ຂົ່ມເຫັງຄຣິສຕະ
ຈັກຂອງພຣະເຈົ້າ.
10ແຕ່ໂດຍພຣະຄຸນຂອງພຣະເຈົ້າ ຂ້າພຣະເຈົ້າຈຶ່ງເປັນຢ່າງທີ່ຂ້າພະເຈົ້າເປັນຢູ່ນີ້, ແລະ ພຣະຄຸນຂອງພຣະອົງທີ່ໄດ້ມອບໃຫ້ແກ່ຂ້າພະເຈົ້ານັ້ນ
ກໍບໍ່ແມ່ນສິ່ງທີ່ບໍ່ມີປະໂຫຍດ. ທາງກົງກັນຂ້າມ, ຂ້າພະເຈົ້າເຮັດການຫນັກຫນ່ວງກວ່າພວກເຂົາທັງຫມົດ. ບໍ່ແມ່ນຂ້າພະເຈົ້າເອງເປັນຄົນເຮັດ,
ແຕ່ເປັນພຣະຄຸນຂອງພຣະເຈົ້າທີ່ຢູ່ໃນຂ້າພະເຈົ້າເຮັດ.11ເພາະສະນັ້ນ ຕົວຂ້າພະເຈົ້າ ຫລື ພວກເຂົາກໍດີ, ເຮົາກໍປະກາດ ແລະ ທ່ານກໍໄດ້ເຊື່ອ.
12ຖ້າເຮົາປະກາດວ່າພຣະຄຣິດໄດ້ຊົງເປັນຄືນມາຈາກຄວາມຕາຍແລ້ວ, ເປັນຫຍັງບາງຄົນໃນພວກທ່ານຈຶ່ງເວົ້າວ່າ
ການເປັນຄືນມາຈາກຄວາມຕາຍນັ້ນບໍ່ມີ?13ຖ້າການເປັນຄືນມາຈາກຕາຍ ນັ້ນບໍ່ມີ, ພຣະຄຣິດເຈົ້າກໍບໍ່ໄດ້ຖືກເຮັດໃຫ້ເປັນຄືນຂຶ້ນມາ;
14ຖ້າພຣະຄຣິດບໍ່ໄດ້ຖືກເຮັດໃຫ້ເປັນຄືນຂຶ້ນມາ, ການປະກາດຂອງເຮົານັ້ນກໍບໍ່ມີປະໂຫຍດຫຍັງ, ແລະ ຄວາມເຊື່ອຂອງທ່ານທັງ
ຫລາຍກໍໄຮ້ປະໂຫຍດດ້ວຍ.
15ແລະ ຄົນກໍຈະເຫັນວ່າເຮົາເປັນພະຍານທີ່ບໍ່ຖືກຕ້ອງເລື່ອງພຣະເຈົ້າ, ເພາະວ່າເຮົາເປັນພະຍານໃນການຂັດແຍ້ງກັບພຣະເຈົ້າ, ທີ່ເວົ້າວ່າພຣະ
ອົງຊົງເຮັດໃຫ້ພຣະຄຣິດເປັນຄືນຂຶ້ນມາແລ້ວ ໃນເມື່ອພຣະອົງບໍ່ໄດ້ຊົງເຮັດ.16ເພາະວ່າຖ້າຄົນຕາຍບໍ່ໄດ້ຖືກເຮັດໃຫ້ເປັນຄືນຂຶ້ນມາ
ພຣະຄຣິດກໍບໍ່ໄດ້ຖືກເຮັດໃຫ້ເປັນຄືນຂຶ້ນມາ;17ແລະ ຖ້າພຣະຄຣິດບໍ່ໄດ້ຊົງຖືກເຮັດໃຫ້ເປັນຄືນຂຶ້ນມາ, ຄວາມ
ເຊື່ອຂອງພວກທ່ານກໍບໍ່ມີປະໂຫຍດ ແລະ ທ່ານກໍຍັງຄົງຢູ່ໃນບາບຂອງຕົນ.
18ແລະ ຖ້າເປັນແບບນັ້ນຄົນທີ່ລ່ວງລັບໃນພຣະຄຣິດກໍຈິບຫາຍໄປເຊັ່ນກັນ.19ຖ້າເຮົາມີຄວາມຫວັງໃນພຣະຄຣິດ, ພຽງແຕ່ຊີວິດນີ້
ເຮົາກໍເປັນພວກຫນ້າສັງເວດທີ່ສຸດໃນຄົນທັງປວງ.
20ແຕ່ບັດນີ້ ພຣະຄຣິດຊົງຖືກເຮັດໃຫ້ເປັນຄືນຂຶ້ນມາແລ້ວ, ຊົງເປັນຜົນທຳອິດຂອງພວກທີ່ລ່ວງລັບໄປ.
21ເພາະວ່າໃນເມື່ອຄວາມຕາຍເກີດຂຶ້ນໂດຍມະນຸດຄົນຫນຶ່ງ, ການເປັນຄືນຂຶ້ນມາຈາກຕາຍກໍເກີດຂຶ້ນມາຈາກມະນຸດຄົນຫນຶ່ງດ້ວຍ.
22ເພາະວ່າໂດຍທາງອາດາມເຮົາທຸກຄົນໄດ້ຕາຍໄປ, ດັ່ງນັ້ນໂດຍທາງພຣະຄຣິດເຮົາທຸກຄົນໄດ້ຖືກເຮັດໃຫ້ມີຊີວິດ.23ແຕ່ເປັນໄປຕາມລຳດັບຄື:
ພຣະຄຣິດ, ຊົງເປັນຜົນທຳອິດ, ຕໍ່ຈາກນັ້ນ ຄືຄົນເຫລົ່ານັ້ນທີ່ເປັນຂອງພຣະຄຣິດທີ່ຈະຖືກເຮັດໃຫ້ມີຊີວິດເມື່ອພຣະອົງສະເດັດກັບຄືນມາ.
24ແລ້ວກໍຈະເປັນເວລາສິ້ນສຸດ, ຊຶ່ງພຣະຄຣິດຈະຊົງມອບຣາຊອານາຈັກໃຫ້ພຣະເຈົ້າພຣະບິດາ. ເມື່ອພຣະອົງຈະຊົງທຳລາຍການປົກ
ຄອງທັງຫມົດ ອຳນາດ ແລະ ຣິດເດດທັງຫມົດ.25ເພາະວ່າພຣະອົງຕ້ອງຊົງຄອບຄອງຈົນກວ່າພຣະອົງຈະຊົງປາບສັດຕູທັງຫມົດໃຫ້
ຢູ່ໃຕ້ຕີນຂອງພຣະອົງ.26ສັດຕຣູຕົວສຸດທ້າຍທີ່ຈະຖືກທຳລາຍຄືຄວາມຕາຍ.
27ເພາະວ່າ "ພຣະອົງຊົງເຮັດໃຫ້ທຸກສິ່ງຢູ່ໃຕ້ພຣະບາດຂອງພະອົງ." ແຕ່ເມື່ອພຣະຄຳພີກ່າວວ່າ "ພຣະອົງຊົງເຮັດໃຫ້ທຸກສິ່ງ"
ນັ້ນຊັດເຈນວ່າຍົກເວັ້ນແຕ່ພຣະອົງຜູ້ຊົງເຮັດໃຫ້ທຸກສິ່ງຢູ່ໃຕ້ ອຳນາດພຣະອົງ.28ເມື່ອທຸກສິ່ງຢູ່ໃຕ້ອຳນາດພຣະອົງແລ້ວ,
ເມື່ອນັ້ນພຣະບຸດພຣະອົງເອງກໍຈະຊົງຢູ່ໃຕ້ອຳນາດພຣະເຈົ້າຜູ້ຊົງເຮັດໃຫ້ທຸກສິ່ງຢູ່ໃຕ້ອຳນາດພຣະອົງ. ເພື່ອພຣະເຈົ້າຈະຊົງເປັນເອກໃນທຸກສິ່ງ.
29ສະນັ້ນ ຄົນເຫລົ່ານັ້ນທີ່ຮັບບັບຕິສະມາເພື່ອຄົນຕາຍຈະເຮັດແນວໃດ? ຖ້າຄົນຕາຍບໍ່ໄດ້ຖືກເຮັດໃຫ້ເປັນຄືນຂຶ້ນມາເລີຍ, ແລ້ວ
ພວກເຂົາຮັບບັບຕິສະມາເພື່ອຄົນຕາຍໄດ້ແນວໃດ?30ແລະ ເປັນຫຍັງເຮົາຈຶ່ງສ່ຽງອັນຕະຣາຍຕະຫລອດເວລາ?
31ພີ່ນ້ອງທັງຫລາຍ ຂ້າພະເຈົ້າຕາຍທຸກວັນ! ນັ້ນຄືສິ່ງທີ່ຂ້າພະເຈົ້າຢືນຢັນໂດຍຄວາມພາກພູມໃຈໃນພວກທ່ານ, ເຊິ່ງຂ້າພະ
ເຈົ້າມີໃນພຣະເຢຊູຄຣິດເຈົ້າຂອງເຮົາ.32ຂ້າພະເຈົ້າໄດ້ຮັບຫຍັງ, ໃນສາຍຕາມະນຸດ, ຖ້າຂ້າພະເຈົ້າຕໍ່ສູ້ກັບສັດປ່າໃນເມືອງເອເຟໂຊ,
ຖ້າຄົນຕາຍບໍ່ໄດ້ເປັນຄືນຂຶ້ນມາ? "ກໍໃຫ້ເຮົາກິນ ແລະ ດື່ມເຖີດ, ເພາະມື້ອື່ນເຮົາກໍຈະຕາຍ."
33ຢ່າຫລົງຜິດເລີຍ: "ການຄົບຄົນຊົ່ວຍ່ອມທຳລາຍສິລະທັມທີ່ດີງາມ."34ຈົ່ງມີສະຕິ! ຈົ່ງໃຊ້ຊີວິດຢ່າງຖືກຕ້ອງ! ຢ່າເຮັດບາບອີກຕໍ່ໄປເລີຍ.
ເພາະບາງຄົນໃນພວກທ່ານບໍ່ມີຄວາມຮູ້ເລື່ອງພຣະເຈົ້າ. ທີ່ຂ້າພະເຈົ້າເວົ້າດັ່ງນີ້ ກໍເພື່ອໃຫ້ພວກທ່ານມີຄວາມລະອາຍໃຈ.
35ແຕ່ຈະມີຄົນເວົ້າວ່າ, "ຄົນຕາຍຖືກເຮັດໃຫ້ເປັນຄືນຂຶ້ນມາໄດ້ແນວໃດ, ແລະ ພວກເຂົາຈະມາດ້ວຍຮ່າງກາຍແບບໃດ?"36ໂອ້ ຄົນທີ່ໂງ່ຈ້າ!
ສິ່ງທີ່ທ່ານຫວ່ານນັ້ນຖ້າບໍ່ຕາຍກ່ອນມັນກໍຈະບໍ່ງອກຂຶ້ນໃຫມ່.
37ແລະສິ່ງທີ່ທ່ານຫວ່ານນັ້ນບໍ່ແມ່ນລຳຕົ້ນ, ແຕ່ຫວ່ານແກ່ນລ້າໆ. ທີ່ຈະກາຍເປັນຕົ້ນເຂົ້າສາລີ ຫລື ຢ່າງອື່ນ.38ແຕ່ວ່າພຣະເຈົ້າປະ
ທານຮູບຮ່າງໃຫ້ກັບເມັດນັ້ນ ຕາມທີ່ພຣະອົງຊົງເລືອກ, ແລະ ປະທານຮູບຮ່າງຂອງມັນເອງໃຫ້ກັບເມັດແຕ່ລະຊະນິດ.39ຊີ້ນນັ້ນບໍ່ຄືກັນທັງຫມົດ.
ຊີ້ນມະນຸດນັ້ນກໍແບບຫນຶ່ງ, ຊີ້ນສັດກໍແບບຫນຶ່ງ, ຊີ້ນນົກກໍແບບຫນຶ່ງ, ຊີ້ນປາກໍແບບຫນຶ່ງ.
40ຮ່າງກາຍສຳລັບສະຫວັນກໍມີ ແລະ ຮ່າງກາຍສຳ ລັບໂລກກໍມີ. ແຕ່ສະຫງ່າຣາສີຂອງຮ່າງກາຍ ສຳລັບສະຫວັນກໍແບບຫນຶ່ງ ແລະ ສະຫງ່າຣາ
ສີຂອງຮ່າງກາຍ ສຳລັບໂລກກໍແບບຫນຶ່ງ.41ສະຫງ່າຣາສີຂອງ ດວງຕາເວັນກໍແບບຫນຶ່ງ, ສະຫງ່າຣາສີຂອງ ດວງຈັນກໍແບບຫນຶ່ງ, ສະຫງ່າຣາ
ສີຂອງ ດວງດາວກໍແບບຫນຶ່ງ. ດາວດວງຫນຶ່ງກໍມີສະຫງ່າຣາສີທີ່ແຕກຕ່າງຈາກ ສະຫງ່າຣາສີຂອງດາວດວງອື່ນໆດ້ວຍ.
42ການເປັນຄືນຂຶ້ນມາຂອງຄົນຕາຍກໍຄືກັນ. ສິ່ງທີ່ຖືກຫວ່ານລົງໄປນັ້ນກໍເປື່ອຍເນົ່າ, ແຕ່ສິ່ງທີ່ຖືກເຮັດໃຫ້ເປັນຂຶ້ນມານັ້ນບໍ່ໄດ້ເປື່ອຍເນົ່າອີກ.43ສິ່ງທີ່
ຖືກຫວ່ານໃນຄວາມອັບອາຍ; ສິ່ງນັ້ນຖືກເຮັດໃຫ້ເປັນຄືນຂຶ້ນມາໃນສະຫງ່າຣາສີ. ສິ່ງທີ່ຖືກຫວ່ານໃນຄວາມອ່ອນແອ; ສິ່ງນັ້ນຖືກເຮັດໃຫ້ເປັນ

ຄືນຂຶ້ນມາໃນຣິດທານຸພາບ.[44]ສິ່ງທີ່ຖືກຫວ່ານໃນຮ່າງກາຍຝ່າຍທັມະຊາດ; ສິ່ງນັ້ນຖືກເຮັດໃຫ້ເປັນຄືນຂຶ້ນມາໃນຮ່າງກາຍຝ່າຍວິນຍານ.
ຖ້າຫາກມີຮ່າງກາຍຝ່າຍທັມະຊາດ, ກໍຍ່ອມມີຮ່າງກາຍຝ່າຍວິນຍານນຳອີກ.
[45]ຕາມທີ່ຂຽນໄວ້ວ່າ, “ມະນຸດຄົນທຳອິດຄື ອາດາມເປັນຈິດວິນຍານທີ່ມີຊີວິດ.” ສ່ວນອາດາມຄົນສຸດທ້າຍນັ້ນ ເປັນຈິດວິນຍານຜູ້ປະທານຊີວິດ.
[46]ແຕ່ຝ່າຍວິນຍານນັ້ນບໍ່ໄດ້ມາກ່ອນ ຝ່າຍທັມະຊາດກ່ອນ, ແລ້ວຈຶ່ງເປັນຝ່າຍຈິດວິນຍານ.
[47]ມະນຸດຄົນທຳອິດຂອງແຜ່ນດິນໂລກ, ມາຈາກດິນຈຶ່ງກາຍເປັນຂີ້ຝຸ່ນດິນ. ມະນຸດຄົນທີສອງເປັນມາຈາກສະຫວັນ.[48]ຜູ້ທີ່ຖືກສ້າງຂຶ້ນຈາກດິນເປັນ
ຢ່າງໃດ, ຄົນເຫລົ່ານັ້ນທີ່ຖືກສ້າງຈາກດິນກໍເປັນຢ່າງນັ້ນ, ແລະ ຜູ້ທີ່ສະເດັດມາຈາກສະຫວັນເປັນຢ່າງໃດ, ຄົນເຫລົ່ານັ້ນ
ທີ່ເປັນຂອງສະຫວັນກໍເປັນຢ່າງນັ້ນດ້ວຍ.[49]ເຊັ່ນດຽວກັບທີ່ເຮົາມີລັກສະນະຂອງມະນຸດທີ່ມາຈາກດິນ, ພວກເຮົາກໍ
ຈະສະທ້ອນລັກສະນະຂອງມະນຸດຈາກສະຫວັນດ້ວຍ.
[50]ພີ່ນ້ອງທັງຫລາຍ, ຂ້າພະເຈົ້າຫມາຍຄວາມວ່າ, ສິ່ງທີ່ເປັນເນື້ອຫນັງແລະເລືອດບໍ່ສາມາດເປັນສ່ວນຫນຶ່ງໃນຣາຊອານາຈັກຂອງພຣະເຈົ້າໄດ້.
ແລະກາຍທີ່ເປື່ອຍເນົ່າບໍ່ສາມາດມີສ່ວນໃນກາຍທີ່ບໍ່ເປື່ອຍເນົ່າ.[51]ຈົ່ງເບິ່ງ! ຂ້າພະເຈົ້າມີຄວາມຈິງອັນເລິກເຊິ່ງທີ່ຈະບອກແກ່ທ່ານຄື: ເຮົາຈະບໍ່ລ່ວງ
ລັບຫມົດທຸກຄົນ, ແຕ່ຈະຖືກປ່ຽນໃຫມ່ຫມົດທຸກຄົນ.
[52]ພວກເຮົາຈະຖືກປ່ຽນໃນຊົ່ວຂະນະດຽວ, ໃນກະພິບຕາ, ເມື່ອເປົ່າແກຄັ້ງສຸດທ້າຍ. ເມື່ອສຽງແກດັງຂຶ້ນ. ຄົນຕາຍຈະຖືກເຮັດໃຫ້ເປັນຄືນ
ຂຶ້ນມາໂດຍບໍ່ມີການເປື່ອຍເນົ່າ, ແລະ ພວກເຮົາຈະໄດ້ຮັບການປ່ຽນໃຫມ່.[53]ເພາະວ່າສິ່ງຊຶ່ງເປື່ອຍເນົ່າໄດ້ນີ້ຕ້ອງໄດ້ສວ
ມໃສ່ກັບສິ່ງທີ່ເປື່ອຍເນົ່າບໍ່ໄດ້, ແລະ ສະພາບທີ່ຕ້ອງຕາຍນີ້ຕ້ອງສວມໃສ່ດ້ວຍສະພາບທີ່ບໍ່ຕາຍ.
[54]ເມື່ອສິ່ງທີ່ເປື່ອຍເນົ່າໄດ້ນີ້ ສວມໃສ່ດ້ວຍສິ່ງທີ່ເປື່ອຍເນົ່າບໍ່ໄດ້, ແລະ ສະພາບທີ່ຕ້ອງຕາຍນີ້ສວມໃສ່ດ້ວຍສະພາບທີ່ບໍ່ຕາຍ, ຈາກນັ້ນ ພຣະຄັມ
ທີ່ຂຽນໄວ້ຈະສຳເລັດວ່າ, "ຄວາມຕາຍຖືກກືນເຂົ້າໃນຊັຍຊະນະແລ້ວ.[55]"ໂອ້ ຄວາມຕາຍ, ຊັຍຊະນະຂອງມຶງຢູ່ໃສ? ໂອ້ ຄວາມຕາຍ, ໄລ
ພິດຂອງມຶງຢູ່ໃສ?
[56]ໄລພິດຂອງຄວາມຕາຍນັ້ນຄືຄວາມບາບ, ແລະ ອຳນາດຂອງຄວາມບາບຄືກົດບັນຍັດ.[57]ຂໍໂມທະນາຂອບຄຸນແດ່ພຣະເຈົ້າ, ຜູ້ປະ
ທານຊັຍຊະນະແກ່ເຮົາ ໂດຍທາງອົງພຣະເຢຊູຄຣິດເຈົ້າຂອງເຮົາ!
[58]ສະນັ້ນ, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ, ຈົ່ງຫມັ້ນຄົງຢູ່ແລະຢ່າຫວັ່ນໄຫວ. ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ຄົບບໍຣິບູນທຸກເວລາ,
ເພາະວ່າທ່ານທັງຫລາຍຮູ້ວ່າ ໃນອົງພຣະຜູ້ເປັນເຈົ້າ ການພຽນພະຍາຍາມຂອງທ່ານຈະບໍ່ເສັຍປະໂຫຍດ.


generated on Tue Jun 17 19:01:42 2025

16 [1]ເລື່ອງກຽ່ວກັບຊັບຊຶ່ງມີການແຜ່ເພື່ອສິ່ງເຄາະແກ່ໄພ່ພົນຂອງພຣະເຈົ້ານັ້ນ, ຂ້າພະເຈົ້າສັ່ງຄຣິສຕະຈັກໃນແຂວງຄາລາເຕຍວ່າແນວໃດ,
ທ່ານທັງຫລາຍກໍ່ຈົ່ງເຮັດເຊັ່ນນັ້ນ.[2]ທຸກວັນຕົ້ນອາທິດໃດ, ໃຫ້ພວກທ່ານແຕ່ລະຄົນແຍກເງິນອອກ ແລະ
ສະສົມໄວ້ຕາມທີ່ທ່ານສາມາດເຮັດໄດ້. ເພື່ອຈະບໍ່ຕ້ອງເກັບສິ່ງສົມເມື່ອຂ້າພະເຈົ້າມາຮອດ.

[3]ແລະເມື່ອຂ້າພະເຈົ້າມາແລ້ວ, ຖ້າພວກທ່ານເຫັນດີນຳໃຜ, ຂ້າພະເຈົ້າຈະສົ່ງຄົນນັ້ນໃຫ້ນຳເງິນຖວາຍຂອງທ່ານ
ພ້ອມກັບຈົດຫມາຍໄປທີ່ນະຄອນ ເຢຣູຊາເລັມ.[4]ແລະຖ້າເຫັນວ່າຂ້າພະເຈົ້າຄວນຈະໄປດ້ວຍ ພວກເຂົາກໍ່ຈະໄປພ້ອມກັບຂ້າພະເຈົ້າ.
[5]ເມື່ອຂ້າພະເຈົ້າຜ່ານແຂວງມາເກໂດເນຍແລ້ວ. ຂ້າພະເຈົ້າຈະມາຫາທ່ານທັງຫລາຍ. ເພາະຂ້າພະເຈົ້າຈະໄປທາງມາເກໂດເນຍ.[6]ແລະ
ຂ້າພະເຈົ້າອາດຈະພັກກັບທ່ານ ຫລື ອາດຈະຢູ່ຈົນຮອດຣະດູຫນາວ, ເພື່ອວ່າເມື່ອຂ້າພະເຈົ້າຈະໄປທາງໃດ, ພວກທ່ານຈະໄດ້ສົ່ງຂ້າພະເຈົ້າໄປ.
[7]ເພາະວ່າຂ້າພະເຈົ້າບໍ່ຕ້ອງການພົບພວກທ່ານໃນຊ່ວງເວລາສັ້ນໆ. ແຕ່ຂ້າພະເຈົ້າຫວັງວ່າຈະໄດ້ຢູ່ກັບພວກທ່ານໃນໄລຍະຫນຶ່ງ,
ຖ້າອົງພຣະຜູ້ເປັນເຈົ້າເຫັນດີ.[8]ແລະ ຂ້າພະເຈົ້າຈະຢູ່ທີ່ເມືອງ ເອເຟໂຊ, ຈົນຮອດເທດສະການ ເພັນເຕຄໍສະເຕ.
[9]ເພາະວ່າທີ່ນີ້ມີປະຕູເປີດໃຫ້ກັບຂ້າພະເຈົ້າຢ່າງກວ້າງຂວາງ, ແລະ ຄົນຂັດຂວາງກໍ່ມີຫລາຍ.
[10]ເມື່ອຕີໂມທຽວມາຫາທ່ານ, ຈົ່ງຣະວັງຢ່າເຮັດໃຫ້ລາວບໍ່ສະບາຍໃຈເມື່ອຢູ່ກັບພວກທ່ານ,
ເພາະລາວເຮັດວຽກຂອງອົງພຣະຜູ້ເປັນເຈົ້າຄືກັບຂ້າພະເຈົ້າ.[11]ຢ່າໃຫ້ຄົນດູຫມິ່ນລາວ. ຈົ່ງຊ່ວຍລາວໃຫ້ເດີນທາງໄປໂດຍສັນຕິສຸກ,
ເພື່ອລາວຈະກັບມາຫາຂ້າພະເຈົ້າ. ເພາະຂ້າພະເຈົ້າກຳລັງລໍຖ້າລາວກັບພວກພີ່ນ້ອງຢູ່.[12]ສ່ວນເລື່ອງຂອງ ອາໂປໂລ, ເຊິ່ງເປັນພີ່ນ້ອງຂອງເຮົານັ້ນ.
ຂ້າພະເຈົ້າຂໍຮ້ອງໃຫ້ລາວໃຫ້ໄປຢ້ຽມຢາມທ່ານທັງຫລາຍ ພ້ອມກັບພວກພີ່ນ້ອງ. ແຕ່ລາວຍັງບໍ່ຕ້ອງການໄປໃນເວລານີ້. ເຖິງຢ່າງໃດກໍ່ຕາມ,
ລາວຈະໄປເມື່ອຮອດເວລາທີ່ເຫມາະສົມ.
[13]ຈົ່ງເຝົ້າຣະວັງໃຫ້ດີ ຈົ່ງຫມັ້ນຄົງໃນຄວາມເຊື່ອ ຈົ່ງເປັນຄົນກ້າຫານ, ຈົ່ງເຂັ້ມແຂງ.[14]ຈົ່ງເຮັດທຸກສິ່ງດ້ວຍຄວາມຮັກ.
[15]ທ່ານຮູ້ວ່າຄອບຄົວຂອງສະເຕຟານາ, ເປັນຄຣິສຕຽນພວກທຳອິດໃນແຂວງ ອະຂາຢາ, ແລະ
ພວກເຂົາໄດ້ອຸທິດຕົນໃນງານບົວຣະບັດຮັບໃຊ້ໄພ່ພົນຂອງພຣະເຈົ້າ. ຂ້າພະເຈົ້າຂໍຮ້ອງ, ທ່ານທັງຫລາຍ,[16]ໃຫ້ຖ່ອມຕົວຕໍ່ຄົນເຊັ່ນນີ້ ແລະ
ຕໍ່ທຸກຄົນທີ່ຮ່ວມເຮັດວຽກ ແລະ ພຽນພະຍາຍາມກັບພວກເຮົາ.
[17]ແລະຂ້າພະເຈົ້າດີໃຈທີ່ ສະເຕຟານາ, ຟອກຕູນາໂຕ, ແລະ ອະຂາອີໂກມາຫາ. ພວກເຂົາໄດ້ຊົດເຊີຍການທີ່ພວກທ່ານບໍ່ມານັ້ນຈົນຄົບຖ້ວນ.
[18]ເພາະວ່າພວກເຂົາເຮັດໃຫ້ວິນຍານຂອງຂ້າພະເຈົ້າແລະ ຂອງພວກກທ່ານມີຄວາມສຸກ. ເພາະສະນັ້ນ, ທ່ານທັງຫລາຍຈົ່ງຍອມຮັບຄົນແບບນີ້.
[19]ຄຣິສຕະຈັກຕ່າງໆໃນແຂວງເອເຊຍຝາກຄຳທັກທາຍມາຫາທ່ານທັງຫລາຍ. ອາກິລາ ແລະ ປີຊະກິລາ,
ກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງພວກເຂົາຝາກຄຳທັກທາຍມາຫາພວກທ່ານໃນອົງພຣະຜູ້ເປັນເຈົ້າ.
[20]ພີ່ນ້ອງທຸກຄົນຝາກຄຳທັກທາຍມາຫາທ່ານ. ຈົ່ງທັກທາຍເຊິ່ງກັນ ແລະ ກັນດ້ວຍຈູບທີ່ບໍຣິສຸດ.
[21]ຂ້າພະເຈົ້າ, ໂປໂລ, ຂຽນຈົດຫມາຍ ນີ້ດ້ວຍລາຍມືຂອງຂ້າພະເຈົ້າເອງ.[22]ຖ້າຜູ້ໃດບໍ່ຮັກອົງພຣະຜູ້ເປັນເຈົ້າ, ກໍ່ຂໍໃຫ້ຄົນນັ້ນຖືກສາບແຊ່ງ.
ຂໍອົງພຣະຜູ້ເປັນເຈົ້າຂອງເຮົາ, ສະເດັດມາເຖີດ![23]ຂໍພຣະຄຸນຂອງພຣະເຢຊູຄຣິດເຈົ້າສະຖິດກັບທ່ານທັງຫລາຍ.
[24]ຄວາມຮັກຂອງຂ້າພະເຈົ້າຢູ່ກັບພວກທ່ານທຸກຄົນໃນພຣະເຢຊູຄຣິດເຈົ້າ.

# 2 ໂກຣິນໂທ

1 [1]ໂປໂລ, ຜູ້ເປັນອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ, ຕາມພຣະປະສົງຂອງພຣະເຈົ້າ ແລະ ຕີໂມທຽວ ຜູ້ເປັນນ້ອງຊາຍຂອງເຮົາ,
ເຖິງຄຣິສຕະຈັກຂອງພຣະເຈົ້າທີ່ຢູ່ໃນເມືອງ ໂກຣິນໂທ, ແລະ ບັນດາຜູ້ເຊື່ອທຸກຄົນທີ່ຢູ່ທົ່ວແຂວງ ອະຂາຢາ.[2]ຂໍໃຫ້ພຣະຄຸນ ແລະ
ສັນຕິສຸກເຊິ່ງມາຈາກພຣະເຈົ້າພຣະບິດາຂອງເຮົາ ແລະ ຈາກພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າ ຈົ່ງສະຖິດກັບທ່ານທັງຫລາຍເຖີດ.

[3]ສາທຸການແດ່ພຣະເຈົ້າ ພຣະບິດາແຫ່ງພຣະເຢຊູຄຣິດເຈົ້າຂອງເຮົາ. ພຣະບິດາຜູ້ຊົງມີຄວາມເມດຕາ ແລະ ພຣະເຈົ້າແຫ່ງຄວາມຊູໃຈ ແລະ
ພຣະເຈົ້າແຫ່ງຄວາມເລົ້າໂລມໃຈທຸກຢ່າງ.[4]ພຣະເຈົ້າເລົ້າໂລມໃຈເຮົາໃນຄວາມທຸກລຳບາກທັງຫມົດຂອງເຮົາ,
ເພື່ອທີ່ວ່າເຮົາຈະສາມາດເລົ້າໂລມໃຈຜູ້ທີ່ທຸກລຳບາກຢ່າງໃດຢ່າງຫນຶ່ງ.
ໄດ້ດ້ວຍຄວາມເລົ້າໂລມໃຈຢ່າງດຽວກັນກັບທີ່ພຣະເຈົ້າເຄີຍເລົ້າໂລມໃຈເຮົາ.
[5]ເພາະວ່າຄວາມທຸກຍາກຂອງພຣະຄຣິດ ເພື່ອເຫັນແກ່ເຮົາມີຫລາຍເຫລືອລົ້ນຢ່າງໃດ, ການເລົ້າໂລມໃຈຂອງເຮົາ
ເນື່ອງຈາກພຣະຄຣິດກໍ່ຫລາຍເຫລືອລົ້ນຢ່າງນັ້ນ.[6]ແຕ່ທີ່ເຮົາຍອມທຸກຍາກນັ້ນ, ກໍ່ເພື່ອໃຫ້ທ່ານໄດ້ຮັບຄວາມເລົ້າໂລມໃຈ ແລະ ຄວາມພົ້ນ; ແລະ
ທີ່ເຮົາໄດ້ຮັບການເລົ້າໂລມໃຈ, ກໍ່ເພື່ອໃຫ້ທ່ານໄດ້ຮັບການເລົ້າໂລມໃຈເຊັ່ນກັນ.
ຄວາມເລົ້າໂລມໃຈຂອງພວກທ່ານທີ່ຈະມີຢ່າງເຕັມທີ່ເມື່ອພວກທ່ານໄດ້ພະຍາຍາມອົດທົນກັບຄວາມທຸກຍາກຄືດັ່ງທີ່ເຮົາໄດ້ອົດທົນນັ້ນ.[7]ແລະ
ເຮົາມີຄວາມຫມັ້ນໃຈຢ່າງແນ່ນອນໃນທ່ານທັງຫລາຍ, ເພາະເຮົາຮູ້ວ່າພວກທ່ານມີສ່ວນໃນຄວາມທຸກຍາກຂອງເຮົາແນວໃດ,
ທ່ານກໍ່ຈະມີສ່ວນໃນການໃຫ້ກຳລັງໃຈຂອງເຮົາຢ່າງນັ້ນ.
[8]ພີ່ນ້ອງທັງຫລາຍ, ເຮົາຕ້ອງການໃຫ້ພວກເຈົ້າຮູ້ກ່ຽວກັບຄວາມທຸກຍາກຕ່າງໆ, ທີ່ເກີດຂຶ້ນກັບເຮົາໃນແຂວງ ເອເຊຍ. ເຊິ່ງຄວາມທຸກນັ້ນ
ຫນັກເກີນກວ່າທີ່ພວກເຮົາຈະອົດທົນໄດ້, ຄວາມທຸກຍາກນັ້ນຫລວງຫາຍຈົນເຮັດໃຫ້ເຮົາເກືອບຫມົດຫວັງທີ່ຈະເອົາຊີວິດລອດມາໄດ້.[9]ທີ່ຈິງ,
ເຮົາຖືກຕັດສິນໂທດປະຫານຊີວິດແລ້ວ. ແຕ່ທີ່ເປັນແບບນັ້ນກໍ່ເພື່ອບໍ່ໃຫ້ເຮົາໄວ້ໃຈຕົວເອງ,
ແຕ່ໃຫ້ໄວ້ໃຈໃນພຣະເຈົ້າຜູ້ຊົງໂຜດໃຫ້ຄົນທັງຫລາຍຟື້ນຈາກຄວາມຕາຍ.
[10]ພຣະອົງໄດ້ຊົງຊ່ວຍເຮົາໃຫ້ພົ້ນຈາກມໍລະນະໄພທີ່ເຮັດໃຫ້ພວກເຮົາເກືອບຕາຍແລ້ວນັ້ນ, ພຣະອົງກໍ່ຈະຊົງຊ່ວຍເຮົາ. ເຮົາໄວ້ໃຈໃນພຣະອົງວ່າ
ພຣະອົງຈະຊົງຊ່ວຍເຮົາອີກຕໍ່ໄປ.
[11]ພວກທ່ານມີສ່ວນໃນການຊ່ວຍເຫລືອເຮົາໂດຍການທູນຂໍຕໍ່ພຣະເຈົ້າເພື່ອເຮົາ. ແລ້ວພຣະອົງຈະຊົງເຮັດຕາມນັ້ນ ດັ່ງນັ້ນ
ຄົນຈຳນວນຫລວງຫຼາຍຈະໄດ້ຂອບພຣະຄຸນເພາະຂ້າພະເຈົ້າ ເນື່ອງຈາກພຣະຄຸນທີ່ປະທານແກ່ເຮົາຜ່ານທາງການອະທິຖານຂອງຫຼາຍໆຄົນ.


generated on Tue Jun 17 19:01:42 2025

[12]ນີ້ເປັນສິ່ງທີ່ພວກເຮົາພູມໃຈ: ຄືໃຈສຳນຶກຜິດແລະຊອບຂອງພວກເຮົາ ເປັນພະຍານ. ວ່າພວກເຮົາໄດ້ປະຕິບັດຕົວເອງເປັນທີ່ມີຊື່ສຽງຕໍ່ໂລກ
ດ້ວຍໃຈທີ່ບໍລິສຸດ ແລະ ຄວາມຈິງໃຈທີ່ມາຈາກພຣະເຈົ້າ. ພວກເຮົາໄດ້ປະຕິບັດຕໍ່ພວກທ່ານຫລາຍກວ່ານັ້ນອີກ
ໂດຍທີ່ບໍ່ໄດ້ປະຕິບັດຕາມປັນຍາຂອງໂລກນີ້, ແຕ່ຕາມພຣະຄຸນຂອງພຣະເຈົ້າ.
[13]ເຮົາບໍ່ໄດ້ຂຽນເລື່ອງອື່ນໃດເຖິງພວກທ່ານເລີຍນອກຈາກເລື່ອງຊຶ່ງທ່ານສາມາດອ່ານ ແລະ ເຂົ້າໃຈໄດ້.[14]ເຖິງວ່າ ຕອນນີ້ທ່ານເຂົ້າໃຈບາງຢ່າງຢູ່,
ແຕ່ໃນວັນແຫ່ງພຣະເຢຊູຄຣິດເຈົ້າຂອງພວກເຮົານັ້ນ, ພວກທ່ານຈະພູມໃຈໃນພວກເຮົາຢ່າງທີ່ພວກເຮົາພູມໃຈໃນພວກທ່ານ.
[15]ເພາະໝັ້ນໃຈໃນເລື່ອງນີ້, ຂ້າພະເຈົ້າຈຶ່ງມີຄວາມປາຖະໜາທີ່ຈະມາຫາພວກທ່ານກ່ອນ,
ເພື່ອທ່ານທັງຫລາຍຈະໄດ້ຮັບຜົນປະໂຫຍດຈາກການທີ່ຂ້າພະເຈົ້າມາຢ້ຽມຢາມພວກທ່ານສອງຄັ້ງ.
[16]ຂ້າພະເຈົ້າວາງແຜນທີ່ຈະມາຢ້ຽມຢາມພວກທ່ານໃນລະຫວ່າງທີ່ເດີນທາງໄປແຂວງ ມາເກໂດເນຍ. ຫລັງຈາກນັ້ນ
ຈະມາຢ້ຽມຢາມທ່ານທັງຫລາຍອີກເທື່ອໜຶ່ງ ເມື່ອກັບຈາກແຂວງ ມາເກໂດເນຍ ແລ້ວຫລັງຈາກນັ້ນພວກທ່ານຈະໄດ້ສົ່ງຂ້າພະເຈົ້າໄປທີ່ແຂວງ
ຢູດາຍ.
[17]ເມື່ອຂ້າພະເຈົ້າຄິດເຊັ່ນນີ້, ຂ້າພະເຈົ້າກຳລັງໂລເລບໍ່? ຂ້າພະເຈົ້າວາງແຜນການຕາມມາດຕະຖານຂອງມະນຸດ, ເພື່ອທີ່ຂ້າພະເຈົ້າຈະເວົ້າວ່າ
"ແມ່ນ" ຫຼື "ບໍ່ແມ່ນ ໃນເວລາດຽວກັນບໍ?[18]ແຕ່ພຣະເຈົ້າຊົງສັດຊື່ສັນໃດ, ເຮົາຈຶ່ງບໍ່ເວົ້າວ່າ "ແມ່ນ" ແລະ "ບໍ່ແມ່ນ" ໃນເວລາດຽວກັນສັນນັ້ນ.
[19]ເພາະວ່າພຣະບຸດຂອງພຣະເຈົ້າຄື, ພຣະເຢຊູຄຣິດເຈົ້າ, ຜູ້ເຊິ່ງຂ້າພະເຈົ້າກັບ ຊີລາ, ແລະ ຕີໂມທຽວ,
ໄດ້ປະກາດໃນບັນດາພວກທ່ານນັ້ນບໍ່ແມ່ນ, "ຄວາມຈິງ" ຫລື "ບໍ່ຈິງ." ແບບຊື່ໆ ແຕ່ພຣະອົງຊົງເປັນ, "ຄວາມຈິງ" ສະເໝີ.
[20]ເພາະວ່າພຣະສັນຍາຂອງພຣະເຈົ້າທຸກຂໍ້ນັ້ນເປັນ "ຄວາມຈິງ" ໂດຍພຣະເຢຊູຄຣິດເຈົ້າ. ດັ່ງນັ້ນ ພວກເຮົາຈຶ່ງກ່າວວ່າ "ອາແມນ" ໂດຍພຣະອົງ
ອັນເປັນການຖວາຍກຽດແດ່ພຣະເຈົ້າ.
[21]ບັດນີ້ ພຣະເຈົ້າຊົງເປັນຜູ້ຊຶ່ງຕັ້ງພວກເຮົາກັບທ່ານທັງຫລາຍໄວ້ໃນພຣະຄຣິດ, ແລະ ພຣະອົງໄດ້ຊົງຫົດສົ່ງພວກເຮົາໄວ້.
[22]ພຣະອົງຊົງໄດ້ປະທັບຕາພວກເຮົາ ແລະ ປະທານພຣະວິນຍານໄວ້ໃນໃຈຂອງພວກເຮົາ
ເພື່ອເປັນຫລັກປະກັນເຖິງສິ່ງທີ່ພຣະອົງຈະປະທານໃຫ້ແກ່ພວກເຮົາໃນພາຍຫລັງ.
[23]ທັງນີ້, ຂໍພຣະເຈົ້າຊົງເປັນພະຍານຝ່າຍ ຂ້າພະເຈົ້າວ່າ ການທີ່ຂ້າພະເຈົ້າຍັງບໍ່ໄດ້ໄປຮອດເມືອງໂກຣິນໂທນັ້ນ
ກໍເພື່ອຈະລະເວັ້ນໂທດພວກທ່ານໄວ້ກ່ອນ[24]ເຮົາບໍ່ໄດ້ພະຍາຍາມທີ່ຈະຄວບຄຸມຄວາມເຊື່ອຂອງທ່ານ.
ແຕ່ເຮົາເຮັດວຽກງານຮ່ວມກັບພວກທ່ານເພື່ອທ່ານທັງຫລາຍຈະມີຄວາມຍິນດີ, ໃນຂະນະທີ່ພວກທ່ານຢືນໝັ້ນຢູ່ໃນຄວາມເຊື່ອ.


generated on Tue Jun 17 19:01:42 2025

2 [1]ດັ່ງນັ້ນ ຂ້າພະເຈົ້າຈຶ່ງຕັດສິນໃຈວ່າ ຈະບໍ່ມາເຮັດໃຫ້ທ່ານທັງຫລາຍເກີດຄວາມທຸກອີກ.[2]ເພາະຖ້າຂ້າພະເຈົ້າເຮັດໃຫ້ພວກທ່ານເປັນທຸກ,
ໃຜຈະເຮັດໃຫ້ຂ້າພະເຈົ້າມີຄວາມຍິນດີ ນັ້ນຄືຄົນທີ່ຂ້າພະເຈົ້າເຮັດໃຫ້ມີຄວາມທຸກນັ້ນແຫຼະ?

[3]ຂ້າພະເຈົ້າໄດ້ຂຽນຂໍ້ຄວາມນັ້ນ ເພື່ອວ່າເມື່ອຂ້າພະເຈົ້າມາ ຂ້າພະເຈົ້າຈະບໍ່ໄດ້ກັງວົນໃຈກັບໂດຍຄົນເຫລົ່ານັ້ນ
ຜູ້ທີ່ຄວນຈະເຮັດໃຫ້ຂ້າພະເຈົ້າມີຄວາມຊື່ນຊົມຍິນດີ. ຂ້າພະເຈົ້າໄວ້ໃຈໃນພວກທ່ານວ່າ ຄວາມຍິນດີຂອງຂ້າພະເຈົ້ານັ້ນ
ກໍເປັນຄວາມຍິນດີຂອງພວກທ່ານເຊັ່ນກັນ.[4]ເພາະວ່າ ຂ້າພະເຈົ້າໄດ້ຂຽນເຖິງທ່ານດ້ວຍຄວາມທຸກຍາກລໍາບາກຢ່າງຫລວງຫລາຍ,
ດ້ວຍຫົວໃຈທີ່ເຈັບປວດ, ແລະ ດ້ວຍນໍ້າຕາໄຫລຢ່າງຫລວງຫລາຍ. ຂ້າພະເຈົ້າບໍ່ໄດ້ປາຖະໜາໃຫ້ພວກທ່ານມີຄວາມທຸກ.
ແຕ່ຂ້າພະເຈົ້າປາຖະໜາທີ່ຈະໃຫ້ທ່ານຮູ້ຈັກຄວາມຮັກອັນເລິກເຊິ່ງ ຊຶ່ງຂ້າພະເຈົ້າມີຕໍ່ທ່ານທັງຫລາຍ.
[5]ຖ້າຫາກວ່າຜູ້ໃດເປັນສາເຫດເຮັດໃຫ້ເກີດຄວາມທຸກ, ຜູ້ນັ້ນກໍບໍ່ໄດ້ເຮັດໃຫ້ຂ້າພະເຈົ້າເປັນທຸກຢູ່ຄົນດຽວ,
ແຕ່ໄດ້ເຮັດໃຫ້ພວກທ່ານທຸກຄົນເປັນທຸກດ້ວຍ ເພາະວ່າຂ້າພະເຈົ້າບໍ່ຢາກຈະເວົ້າແຮງກັບພວກທ່ານຈົນເກີນໄປ.
[6]ການທີ່ຄົນສ່ວນຫລາຍທີ່ໄດ້ລົງໂທດຄົນດັ່ງກ່າວກໍພຽງພໍແລ້ວ.[7]ດັ່ງນັ້ນ ໃນເວລານີ້, ສິ່ງທີ່ຄວນເຮັດຫລາຍກວ່າການລົງໂທດຄືການໃຫ້ອະໄພ
ແລະ ເລົ້າໂລມໃຈລາວ. ເພາະຢ້ານວ່າລາວຈະຈົມລົງໃນຄວາມທຸກເຫລືອລົ້ນ.
[8]ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂໍໃຫ້ກໍາລັງໃຈທ່ານທີ່ຢືນຢັນຄວາມຮັກທີ່ມີຕໍ່ລາວໃນກາງສາທາລະນະຊົນ.[9]ນີ້ຄືເຫດຜົນທີ່ຂ້າພະເຈົ້າໄດ້ຂຽນ,
ເພື່ອທີ່ຈະທົດລອງໃຈທ່ານທັງຫລາຍ ແລະ ເພື່ອທີ່ຈະຮູ້ວ່າພວກທ່ານຈະຍອມເຊື່ອຟັງໃນທຸກເລື່ອງຫລືບໍ່.
[10]ຖ້າພວກທ່ານໃຫ້ອະໄພກັບຜູ້ໃດ, ຂ້າພະເຈົ້າກໍຈະໃຫ້ອະໄພກັບຜູ້ນັ້ນດ້ວຍ.
ສິ່ງທີ່ຂ້າພະເຈົ້າໄດ້ໃຫ້ອະໄພໄປນັ້ນຖ້າຂ້າພະເຈົ້າໄດ້ໃຫ້ອະໄພໃນເລື່ອງໃດຂ້າພະເຈົ້າກໍເຮັດ ເພາະເຫັນແກ່ທ່ານທັງຫລາຍ
ສະເພາະພຣະພັກຂອງພຣະຄຣິດ.[11]ເພື່ອວ່າເຮົາຈະໄດ້ບໍ່ຫລົງກົນອຸບາຍມານຊາຕານ. ເພາະວ່າພວກເຮົາຮູ້ແຜນການຕ່າງໆຂອງມັນ.
[12]ເມື່ອຂ້າພະເຈົ້າ ມາຮອດເມືອງ ໂທອາດ ເພື່ອປະກາດຂ່າວປະເສີດຂອງພຣະຄຣິດນັ້ນ ອົງພຣະຜູ້ເປັນເຈົ້າກໍຊົງເປີດທາງໃຫ້ແກ່ຂ້າພະເຈົ້າ.
[13]ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າກໍຍັງບໍ່ມີຄວາມສະບາຍໃຈເລີຍ, ເພາະວ່າຂ້າພະເຈົ້າບໍ່ພົບ ຕີໂຕ ນ້ອງຊາຍຂອງຂ້າພະເຈົ້າທີ່ນັ້ນ.
ຂ້າພະເຈົ້າຈຶ່ງໄດ້ບອກລາພວກນັ້ນ ແລະ ເດີນທາງກັບໄປທີ່ແຂວງ ມາເກໂດເນຍ.
[14]ແຕ່ຂອບພຣະຄຸນພຣະເຈົ້າ, ຜູ້ຊົງໃຫ້ພວກເຮົາມີໄຊຊະນະສະເຫມີໃນພຣະຄຣິດ. ແລະ
ຊົງໂຜດໃຫ້ກິ່ນຫອມອັນອ່ອນຫວານແຫ່ງຄວາມຮູ້ຂອງພຣະອົງກະຈາຍໄປທົ່ວທຸກບ່ອນໂດຍຜ່ານທາງພວກເຮົາ.[15]ເພາະສໍາລັບພຣະເຈົ້າແລ້ວ,
ພວກເຮົາເປັນກິ່ນອັນຫອມຫວານຂອງພຣະຄຣິດ ທັງໃນບັນດາຄົນທີ່ກໍາລັງຈະລອດພົ້ນ ແລະ ໃນບັນດາຄົນທີ່ກໍາລັງຈະຈິບຫາຍດ້ວຍ.
[16]ຝ່າຍຄົນທີ່ກໍາລັງຈະຈິບຫາຍ, ກໍເປັນກິ່ນແຫ່ງຄວາມຕາຍເຊິ່ງນໍາໄປສູ່ຄວາມຕາຍ. ຝ່າຍຄົນກໍາລັງຈະລອດພົ້ນ,
ກໍເປັນກິ່ນແຫ່ງຊີວິດທີ່ນໍາໄປສູ່ຊີວິດ. ແລ້ວໃຜຈະມີຄວາມເຫມາະສົມກັບພັນທະກິດເຫລົ່ານີ້?
[17]ເພາະວ່າພວກເຮົາບໍ່ເປັນຄືກັບຄົນຈໍານວນຫລວງຫລາຍທີ່ຫາຜົນປະໂຫຍດຈາກພຣະຄໍາຂອງພຣະເຈົ້າ.
ແຕ່ພວກເຮົາກ່າວໃນພຣະຄຣິດດ້ວຍແຮງຈູງໃຈທີ່ບໍຣິສຸດ, ຄືກັບຄົນທີ່ມາຈາກພຣະເຈົ້າ ແລະ ຢູ່ໃນສາຍພຣະເນດຂອງພຣະເຈົ້າ.


generated on Tue Jun 17 19:01:42 2025

3 [1]ພວກເຮົາກຳລັງຍ້ອງຍໍຕົວເຮົາເອງອີກແລ້ວບໍ? ເຮົາຕ້ອງການຫນັງສືແນະນຳຕົວຕໍ່ພວກທ່ານ ຫລື ຈາກພວກທ່ານ, ເຫມືອນກັບບາງຄົນບໍ?
[2]ຕົວທ່ານທັງຫລາຍເອງເປັນຫນັງສືທີ່ແນະນຳພວກເຮົາ, ຊຶ່ງໄດ້ຂຽນໄວ້ທີ່ດວງໃຈຂອງເຮົາ, ເພື່ອໃຫ້ຄົນທັງປວງໄດ້ຮູ້ ແລະ ໄດ້ອ່ານ.[3]ແລະ
ທ່ານທັງຫລາຍເອງກໍໄດ້ສະແດງໃຫ້ເຫັນວ່າ ພວກທ່ານເປັນຫນັງສືຂອງພຣະຄຣິດ, ທີ່ພວກເຮົາເປັນຜູ້ສົ່ງ ແລະ ບໍ່ໄດ້ຂຽນດ້ວຍນ້ຳມຶກ
ແຕ່ໂດຍພຣະວິນຍານຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ແລະ ບໍ່ໄດ້ຂຽນໄວ້ເທິງແຜ່ນສີລາ, ແຕ່ຂຽນໄວ້ທີ່ດວງໃຈຂອງມະນຸດ.

[4]ແລະ ພວກເຮົາມີຄວາມຫມັ້ນໃຈຢ່າງນີ້ໃນພຣະເຈົ້າ ໂດຍຜ່ານທາງພຣະຄຣິດ.
[5]ພວກເຮົາບໍ່ໄດ້ຖືວ່າສິ່ງຫນຶ່ງສິ່ງໃດເກີດຈາກຄວາມສາມາດຂອງຕົວພວກເຮົາເອງ. ແຕ່ວ່າ, ຄວາມສາມາດຂອງພວກເຮົານັ້ນມາຈາກພຣະເຈົ້າ.
[6]ແລະ ພຣະເຈົ້າອົງນີ້ໄດ້ເຮັດໃຫ້ເຮົາເປັນຜູ້ບົວລະບັດແຫ່ງພັນທະສັນຍາໃຫມ່. ບໍ່ແມ່ນຕາມຕົວຫນັງສືແຕ່ຕາມພຣະວິນຍານ
ດ້ວຍວ່າຕົວຫນັງສືນັ້ນເຮັດໃຫ້ພວກເຮົາຕ້ອງຕາຍ, ແຕ່ພຣະວິນຍານນັ້ນເຮັດໃຫ້ພວກເຮົາມີຊີວິດ.
[7]ແຕ່ຖ້າການບົວລະບັດທີ່ນຳໄປສູ່ຄວາມຕາຍຕາມໂຕຫນັງສືທີ່ໄດ້ຂຽນໄວ້ເທິງສີລານັ້ນກໍມາພ້ອມສະຫງ່າລາສີຈົນຄົນ ອິດສະລາເອນ ບໍ່ສາ
ມາດຈະເບິ່ງຫນ້າຂອງ ໂມເຊ ໄດ້. ເພາະສະຫງ່າລາສີເທິງໃບຫນ້າຂອງທ່ານ, ເຖິງແມ່ນວ່າເປັນສະຫງ່າລາສີທີ່ຈາງຫາຍໄປ.[8]ດັ່ງນັ້ນ ການບົວລະ
ບັດຕາມພຣະວິນຍານ ກໍຍິ່ງຈະມີສະຫງ່າລາສີຫລາຍກວ່ານັ້ນອີກບໍ່ແມ່ນບໍ?
[9]ເພາະຖ້າການບົວລະບັດທີ່ກ່ຽວກັບການລົງໂທດຍັງມີສະຫງ່າລາສີແລ້ວ, ການບົວລະບັດກ່ຽວກັບການຊອບທຳຍິ່ງຈະມີສະຫງ່າລາ
ສີຫລາຍກວ່າຫລາຍເທົ່າ![10]ເພາະວ່າໃນຄວາມເປັນຈິງນັ້ນ, ສະຫງ່າລາສີທີ່ເຄີຍມີນັ້ນກໍບໍ່ມີອີກຕໍ່ໄປ, ເນື່ອງຈາກສະຫງ່າລາສີທີ່ໃຫຍ່ກວ່າເຕັມທັບ
ໄວ້.[11]ເພາະວ່າຖ້າສິ່ງທີ່ຈາງຫາຍໄປຍັງມາດ້ວຍສະຫງ່າລາສີແລ້ວ, ສິ່ງທີ່ຍືນຍົງກໍຈະມາພ້ອມສະຫງ່າລາສີທີ່ຍິ່ງໃຫຍ່ກວ່າຫຼາຍເທົ່າ!
[12]ເມື່ອພວກເຮົາມີຄວາມຫມັ້ນໃຈຢ່າງນັ້ນແລ້ວ, ພວກເຮົາຈຶ່ງມີຄວາມກ້າຫານ.[13]ພວກເຮົາຈຶ່ງບໍ່ຄືກັບ ໂມເຊ, ທີ່ເອົາຜ້າປົກຄຸມຫນ້າໄວ້,
ເພື່ອບໍ່ໃຫ້ຄົນ ອິດສະຣາເອນ ແນມເບິ່ງການສິ້ນສຸດຂອງສະຫງ່າລາສີ ທີ່ຄ່ອຍໆສູນຫາຍໄປນັ້ນ.
[14]ແຕ່ສ່ວນຄົນທີ່ຄວາມຄິດຂອງເຂົາຖືກປິດໄປ. ເພາະວ່າຕະຫລອດມາຈົນເຖິງທຸກວັນນີ້ ເມື່ອລາວອ່ານພຣະຄຳພີເດີມ. ຜ້າຄຸມນັ້ນ
ກໍຍັງຄົງຢູ່ບໍ່ໄດ້ຖືກເປີດອອກ, ເພາະວ່າຈະເປີດອອກໄດ້ ກໍໂດຍພຣະຄຣິດເທົ່ານັ້ນ.[15]ແຕ່ວ່າຕະຫລອດມາຈົນເຖິງທຸກວັນນີ້, ເມື່ອໃດ
ທີ່ລາວອ່ານຖ້ອຍຄຳຂອງ ໂມເຊ, ຜ້າຄຸມນັ້ນກໍຍັງຄົງປິດໃຈຂອງລາວຢູ່.[16]ແຕ່ເມື່ອຜູ້ໃດຫລຽວກັບມາຫາອົງພຣະຜູ້ເປັນເຈົ້າ,
ຜ້າຄຸມນັ້ນກໍຈະຖືກເປີດອອກ.
[17]ອົງພຣະຜູ້ເປັນເຈົ້າຊົງເປັນພຣະວິນຍານ. ແລະ ເມື່ອພຣະວິນຍານຊົງຢູ່ບ່ອນໃດ, ເສລີພາບກໍມີຢູ່ທີ່ນັ້ນ.[18]ແລະ ບັດນີ້,
ພວກເຮົາທຸກຄົນທີ່ບໍ່ມີຜ້າຄຸມຫນ້ານັ້ນຕົວພວກເຮົາຈຶ່ງສະທ້ອນສະຫງ່າລາສີຂອງອົງພຣະຜູ້ເປັນເຈົ້າ. ແລ້ວພວກເຮົາກໍໄດ້ຮັບ
ການປ່ຽນແປງໃຫ້ເປັນຄືກັບລັກສະນະທີ່ເຕັມໄປດ້ວຍສະຫງ່າລາສີຂອງພຣະອົງ, ຄືມີກຽດຕິຍົດເປັນລຳ
ດັບຂຶ້ນໄປຄືກັບກຽດຕິຍົດທີ່ຈາກອົງພຣະຜູ້ເປັນເຈົ້າ, ຜູ້ຊົງເປັນພຣະວິນຍານ.


generated on Tue Jun 17 19:01:42 2025

4 [1]ເພາະເຫດທີ່, ພວກເຮົາມີພັນທະກິດນີ້, ໂດຍໄດ້ຮັບຄວາມເມດຕາ, ພວກເຮົາຈຶ່ງບໍ່ທໍ້ຖອຍ.[2]ແຕ່ພວກເຮົາໄດ້ປະຖິ້ມສິ່ງຕ່າງໆທີ່ຫນ້າອັບອາຍ
ແລະ ສິ່ງທີ່ປິດເຊື່ອງໄວ້. ພວກເຮົາບໍ່ໄດ້ດຳລົງຊີວິດຄືກັບຄົນທີ່ຫລອກລວງ ແລະ ພວກເຮົາບໍ່ໄດ້ໃຊ້ພຣະຄັມຂອງພຣະເຈົ້າຢ່າງບໍ່ຖືກຕ້ອງ.
ໂດຍການທີ່ພວກເຮົາສະແດງຄວາມຈິງນັ້ນ, ພວກເຮົາໄດ້ມອບຕົວຂອງເຮົາໄວ້ກັບຈິດສຳນຶກຜິດ ແລະ ຊອບ ຂອງຄົນທັງປວງ
ໃນສາຍພຣະເນດຂອງພຣະເຈົ້າ.

[3]ແຕ່ຖ້າຂ່າວປະເສີດຂອງພວກເຮົາຍັງຖືກປິດບັງໄວ້, ກໍ່ຖືກປິດບັງໄວ້ຈາກຄົນເຫລົ່ານັ້ນທີ່ກຳລັງຈະດັບສູນໄປເທົ່ານັ້ນ.[4]ໃນກໍລະນີຂອງພວກເຂົາ,
ກໍ່ຄືພຣະຂອງໂລກນີ້ໄດ້ປິດບັງໃຈທີ່ບໍ່ເຊື່ອຂອງພວກເຂົາໃຫ້ມືດມົວໄປ. ເພື່ອເຮັດໃຫ້ພວກເຂົາບໍ່ສາມາດເຫັນແສງສະຫວ່າງແຫ່ງຂ່າວປະເສີດ
ເລື່ອງສະຫງ່າລາສີຂອງພຣະຄຣິດ, ຜູ້ຊຶ່ງເປັນລັກສະນະຂອງພຣະເຈົ້າໄດ້.
[5]ເພາະວ່າພວກເຮົາບໍ່ໄດ້ປະກາດຕົວພວກເຮົາເອງ, ແຕ່ໄດ້ປະກາດພຣະເຢຊູຄຣິດເຈົ້າວ່າຊຶ່ງເປັນອົງພຣະຜູ້ເປັນເຈົ້າ, ແລະ
ໄດ້ປະກາດຕົວເອງວ່າເປັນຜູ້ຮັບໃຊ້ຂອງທ່ານທັງຫລາຍ ເພາະເຫັນແກ່ພຣະເຢຊູຄຣິດເຈົ້າ.[6]ເພາະວ່າພຣະເຈົ້າເປັນຜູ້ທີ່ໄດ້ກ່າວວ່າ
"ຄວາມສະຫວ່າງຈະສ່ອງອອກມາຈາກຄວາມມືດ." ພຣະອົງໄດ້ຊົງສ່ອງສະຫວ່າງເຂົ້າມາໃນໃຈຂອງພວກເຮົາ,
ເພື່ອໃຫ້ເຮົາມີຄວາມສະຫວ່າງແຫ່ງຄວາມຮູ້ເຖິງສະຫງ່າຂອງພຣະເຈົ້າທີ່ຊົງສຳແດງອອກຜ່ານພຣະເຢຊູຄຣິດ.
[7]ແຕ່ພວກເຮົາມີຊັບສົມບັດນີ້ຢູ່ໃນພາຊະນະດິນ, ເພື່ອທີ່ຈະສະແດງໃຫ້ເຫັນຢ່າງຊັດເຈນວ່າ ຣິດອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ ແລະ
ບໍ່ໄດ້ມາຈາກຕົວເຮົາເອງ.[8]ພວກເຮົາປະສົບຄວາມຍາກລຳບາກທຸກທາງ, ແຕ່ບໍ່ໄດ້ຖືກຢຽບຢ່ຳ. ພວກເຮົາສັບສົນແຕ່ບໍ່ຫມົດຫວັງ.
[9]ພວກເຮົາຖືກຂົ່ມເຫັງ ແຕ່ກໍ່ບໍ່ຖືກປະຖິ້ມ. ພວກເຮົາຖືກຕີໃຫ້ລົ້ມລົງ ແຕ່ພວກເຮົາກໍ່ບໍ່ໄດ້ຖືກທຳລາຍ.
[10]ພວກເຮົາແບກຄວາມຕາຍຂອງພຣະເຢຊູຄຣິດເຈົ້າໄວ້ໃນຮ່າງກາຍພວກເຮົາສະເຫມີ, ເພື່ອວ່າຊີວິດຂອງພະເຢຊູຄຣິດເຈົ້າ
ຈະປາກົດໃນຮ່າງກາຍຂອງພວກເຮົາເຊັ່ນກັນ.
[11]ຂ້າພະເຈົ້າຜູ້ທີ່ຍັງມີຊີວິດຢູ່ນັ້ນຕ້ອງຖືກມອບໄວ້ກັບຄວາມຕາຍຢູ່ສະເຫມີເພາະເຫັນແກ່ພຣະເຢຊູຄຣິດເຈົ້າ,
ເພື່ອທີ່ວ່າຊີວິດຂອງພຣະເຢຊູຄຣິດເຈົ້າຈະຊົງສຳແດ່ຜ່ານທາງຮ່າງກາຍຂອງພວກເຮົາທີ່ຕ້ອງຕາຍນັ້ນ.[12]ແລະ
ດ້ວຍເຫດຜົນນີ້ເອງຄວາມຕາຍກຳລັງທຳງານໃນຊີວິດຂອງພວກເຮົາ, ແຕ່ຊີວິດກຳລັງທຳງານຢູ່ໃນທ່ານທັງຫລາຍ.
[13]ແຕ່ວ່າພວກເຮົາມີວິນຍານແຫ່ງຄວາມເຊື່ອທີ່ເຫມືອນກັນ ຕາມທີ່ຂຽນໄວ້ວ່າ: “ຂ້າພະເຈົ້າເອງກໍ່ເຊື່ອ, ດັ່ງນັ້ນຂ້າພະເຈົ້າຈຶ່ງເວົ້າເຊັ່ນກັນ."
ພວກເຮົາເອງກໍ່ມີຄວາມເຊື່ອເຊັ່ນດຽວກັນຄື ເມື່ອພວກເຮົາເຊື່ອແລ້ວ, ດັ່ງນັ້ນພວກເຮົາຈຶ່ງເວົ້າ[14]ພວກເຮົາຮູ້ວ່າ ພຣະອົງຊົງໃຫ້
ພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຟື້ນຄືນພຣະຊົນ. ຈະຊົງໂຜດໃຫ້ພວກເຮົາເປັນຄືນຂຶ້ນມາດ້ວຍກັນໂດຍພຣະເຢຊູຄຣິດເຈົ້າ
ພວກເຮົາຮູ້ວ່າພຣະອົງຈະຊົງນຳພວກເຮົາເຂົ້າເຝົ້າພ້ອມກັບທ່ານທັງຫລາຍ.[15]ເພາະວ່າທຸກສິ່ງນັ້ນ ເປັນໄປເພື່ອປະໂຫຍດຂອງທ່ານທັງຫລາຍ,
ເພື່ອທີ່ວ່າເມື່ອພຣະຄຸນໄດ້ແຜ່ໄປເຖິງຜູ້ຄົນຫລວງຫລາຍນັ້ນ, ກໍ່ຈະມີການຂອບພຣະຄຸນ ເພື່ອຖວາຍກຽດແດ່ພຣະເຈົ້າຫລາຍຂຶ້ນ.
[16]ດັ່ງນັ້ນ ພວກເຮົາຈຶ່ງບໍ່ທໍ້ຖອຍ. ເຖິງແມ່ນວ່າຮ່າງກາຍພາຍນອກຂອງພວກເຮົາຈະຊຸດໂຊມໄປ, ແຕ່ຈິດໃຈພາຍໃນນັ້ນ
ຍັງຄົງຈະເລີນຂຶ້ນໃຫມ່ທຸກວັນ.[17]ເພາະວ່າຄວາມທຸກຍາກເລັກໆນ້ອຍໆ, ທີ່ເຮົາຮັບພຽງຊົ່ວຄາວນັ້ນ ຈະຕຽມພວກເຮົາສຳລັບກຽດຕິຍົດຍິ່ງ
ໃຫຍ່ຖາວອນ ຢ່າງບໍ່ມີສິ່ງປຽບທຽບ ເພາະວ່າ ພວກເຮົາບໍ່ໄດ້ເອົາໃຈໃສ່ສິ່ງຂອງທີ່ພວກເຮົາເບິ່ງເຫັນຢູ່ ແຕ່ເປັນສິ່ງຂອງທີ່ເບິ່ງບໍ່ເຫັນ.
[18]ສິ່ງທີ່ພວກເຮົາເບິ່ງເຫັນນັ້ນບໍ່ຍືນຍົງ, ແຕ່ສິ່ງທີ່ເບິ່ງບໍ່ເຫັນນັ້ນກໍ່ຖາວອນນິລັນດອນ.


generated on Tue Jun 17 19:01:42 2025

5 [1]ພວກເຮົາຮູ້ວ່າ ຖ້າເຮືອນດິນຊຶ່ງພວກເຮົາອາໄສຢູ່ນີ້ຖືກທຳລາຍລົງແລ້ວ,
ພວກເຮົາກໍຍັງມີທີ່ອາໄສຊຶ່ງມາຈາກພຣະເຈົ້າທີ່ບໍ່ໄດ້ສ້າງຂຶ້ນໂດຍມືຂອງມະນຸດ, ແຕ່ເປັນທີ່ຢູ່ອາໄສນິລັນດອນ, ໃນສະຫວັນ.
[2]ເພາະວ່າໃນເຮືອນດິນນີ້ ພວກເຮົາຮ້ອງໄຫ້ຢູ່ ແລະ ປາຖະໜາທີ່ຈະສວມໃສ່ທີ່ອາໄສຊຶ່ງມາຈາກສະຫວັນ.
[3]ເພາະວ່າເມື່ອພວກເຮົາສວມໃສ່ແລ້ວ ເຮົາຈະໄດ້ບໍ່ຕ້ອງເປືອຍກາຍ.

[4]ເພາະວ່າຂະນະທີ່ພວກເຮົາຢູ່ໃນເຮືອນດິນນີ້, ພວກເຮົາໂອຍຄາງເປັນທຸກ. ພວກເຮົາບໍ່ປາຖະໜາທີ່ຈະເປືອຍກາຍ.
ແຕ່ພວກເຮົາປາຖະໜາທີ່ຈະຫົ່ມກາຍໃຫມ່ນັ້ນ, ເພື່ອວ່າຮ່າງກາຍທີ່ຕ້ອງຕາຍນີ້ ໄດ້ຖືກກືນກິນໂດຍຊີວິດນິລັນ.
[5]ເພາະວ່າຜູ້ທີ່ຈັດຕຽມພວກເຮົາສຳລັບສິ່ງນີ້ຄືພຣະເຈົ້າ, ຜູ້ໄດ້ປະທານພຣະວິນຍານເປັນເຄື່ອງມັດຈຳແກ່ພວກເຮົາ
ສຳລັບສິ່ງທີ່ຈະມາໃນອະນາຄົດ.
[6]ດ້ວຍເຫດນີ້ ຈຶ່ງມີຄວາມຫມັ້ນໃຈຢູ່ສະເຫມີ. ຈຶ່ງຮູ້ວ່າໃນຂະນະທີ່ພວກເຮົາອາໄສໃນເຮືອນນີ້, ພວກເຮົາຢູ່ຫ່າງໄກຈາກພຣະເຈົ້າ.
[7]ເພາະວ່າພວກເຮົາດຳເນີນໄປດ້ວຍຄວາມເຊື່ອ, ບໍ່ແມ່ນຕາມທີ່ຕາເບິ່ງເຫັນ.[8]ດັ່ງນັ້ນ ພວກເຮົາຈຶ່ງມີຄວາມຫມັ້ນໃຈ.
ວ່າການທີ່ຈະອອກຈາກຮ່າງກາຍນີ້ ແລະ ໄປຢູ່ກັບພຣະຜູ້ເປັນເຈົ້ານັ້ນຍ່ອມດີກວ່າ.
[9]ດັ່ງນັ້ນ ພວກເຮົາຈຶ່ງຕັ້ງເປົ້າໃສ່ວ່າ, ບໍ່ວ່າເຮົາຈະຢູ່ ຫລື ຈະຈາກຮ່າງກາຍນີ້ໄປ, ພວກເຮົາກໍຈະເປັນທີ່ພໍພຣະໄທຂອງພຣະອົງ.
[10]ເພາະວ່າພວກເຮົາທຸກຄົນນັ້ນຈະຕ້ອງປະກົດຕົວຕໍ່ບັນລັງແຫ່ງການພິພາກສາຂອງພຣະຄຣິດ, ເພື່ອທີ່ວ່າແຕ່ລະຄົນຈະໄດ້ຮັບຢ່າງເຫມາະສົມ
ຕາມສິ່ງທີ່ໄດ້ເຮັດໃນຂະນະທີ່ອາໄສໃນຮ່າງກາຍນີ້, ບໍ່ວ່າຈະເປັນສິ່ງທີ່ດີ ແລະ ບໍ່ດີ.
[11]ເພາະເຫດທີ່ຂ້າພະເຈົ້າຮູ້ຈັກຄວາມຫນ້າຢ້ານກົວຂອງອົງພຣະຜູ້ເປັນເຈົ້າແລ້ວ, ພວກເຮົາຈຶ່ງໄດ້ຊັກຊວນຄົນທັງຫລາຍ.
ພວກເຮົາເປັນແນວໃດນັ້ນ ກໍເປັນທີ່ປະກົດຕົວຢ່າງຈະແຈ້ງຕໍ່ພຣະເຈົ້າແລ້ວ.
ຂ້າພະເຈົ້າກໍຍັງມີຄວາມຫວັງວ່າຈະປະກົດຢ່າງຈະແຈ້ງຕໍ່ຈິດສຳນຶກຜິດ ແລະ ຊອບຂອງທ່ານທັງຫລາຍດ້ວຍເຊັ່ນກັນ.
[12]ພວກເຮົາບໍ່ໄດ້ພະຍາຍາມທີ່ຈະຊັກຊວນພວກທ່ານໃຫ້ຍ້ອງຍໍຕົວເຮົາອີກ. ແຕ່,
ພວກເຮົາໃຫ້ທ່ານທັງຫລາຍມີໂອກາດທີ່ຈະອວດອ້າງພວກເຮົາໄດ້, ເພື່ອພວກທ່ານຈະມີຄຳຕອບໃຫ້ກັບຄົນເຫລົ່ານັ້ນ
ຜູ້ທີ່ມັກອວດອ້າງໃນສິ່ງທີ່ປາກົດ ແຕ່ບໍ່ມັກອວດອ້າງເຖິງສິ່ງທີ່ຢູ່ໃນໃຈ.
[13]ເພາະວ່າ ຖ້າພວກເຮົາປະພຶດຢ່າງຄົນເສັຍສະຕິ, ພວກເຮົາກໍປະພຶດເພື່ອເຫັນແກ່ພຣະເຈົ້າ; ແລະ ຖ້າພວກເຮົາປະພຶດຢ່າງຄົນມີສະຕິ,
ພວກເຮົາກໍປະພຶດເພື່ອຜົນປະໂຫຍດຂອງທ່ານ.[14]ເພາະວ່າຄວາມຮັກຂອງພຣະຄຣິດໄດ້ຄວບຄຸມພວກເຮົາຢູ່, ເພາະພວກເຮົາແນ່ໃຈຢ່າງນີ້ວ່າ:
ມີຄົນຫນຶ່ງໄດ້ຕາຍເພື່ອຄົນທັງປວງ, ດັ່ງນັ້ນທຸກຄົນຈຶ່ງໄດ້ຕາຍແລ້ວ.[15]ແລະ ພຣະຄຣິດຊົງສິ້ນພຣະຊົນເພື່ອຄົນທັງປວງ.
ເພື່ອວ່າຄົນທັງຫລາຍທີ່ມີຊີວິດ ຈະບໍ່ໄດ້ຢູ່ເພື່ອຕົວເອງອີກຕໍ່ໄປ ແຕ່ຈະຢູ່ເພື່ອພຣະອົງຜູ້ໄດ້ຊົງສິ້ນພຣະຊົນ ແລະ ຊົງເປັນຄືນຂຶ້ນມາແລ້ວ.
[16]ເຫດສະນັ້ນ, ນັບແຕ່ນີ້ເປັນຕົ້ນໄປ ພວກເຮົາຈຶ່ງບໍ່ພິຈາລະນາຜູ້ໃດຕາມມາດຕະຖານຂອງມະນຸດ,
ເຖິງແມ່ນວ່າໃນອະດີດນັ້ນພວກເຮົາເຄີຍພິຈາລະນາພຣະຄຣິດຕາມຢ່າງນີ້ມາແລ້ວ. ແຕ່ດຽວນີ້ພວກເຮົາຈະບໍ່ພິຈາລະນາຜູ້ໃດຢ່າງນີ້ອີກຕໍ່ໄປ.
[17]ດັ່ງນັ້ນ, ຖ້າຜູ້ໃດຢູ່ໃນພຣະຄຣິດ, ລາວກໍເປັນຄົນທີ່ຖືກສ້າງໃຫມ່ແລ້ວ. ທຸກສິ່ງທຸກຢ່າງທີ່ເກົ່າໆກໍລ່ວງໄປ. ເບິ່ງເຖີດກາຍເປັນສິ່ງໃຫມ່ທັງນັ້ນ.
[18]ສິ່ງທັງຫມົດນີ້ມາຈາກພຣະເຈົ້າ. ຜູ້ຊົງໃຫ້ພວກເຮົາຄືນດີກັນກັບພຣະອົງທາງພຣະຄຣິດ, ແລະ
ຊົງປະທານພາລະກິດແຫ່ງການຄືນດີກັນໃຫ້ພວກເຮົາ.[19]ນັ້ນຄື, ໂລກໄດ້ຄືນດີກັບພຣະອົງຜ່ານທາງອົງພຣະເຢຊູເຈົ້າ, ແລະ
ບໍ່ໄດ້ກ່າວໂທດໃນການລ່ວງລະເມີດຂອງພວກເຂົາ. ພະອົງຊົງໃຫ້ເລື່ອງການຄືນດີນັ້ນກັບພວກເຮົາໃນການປະກາດ.
[20]ດັ່ງນັ້ນ ພວກເຮົາຈຶ່ງຖືກແຕ່ງຕັ້ງໃຫ້ເປັນທູດຂອງພຣະຄຣິດເຈົ້າ, ໂດຍທີ່ພຣະເຈົ້າຊົງຂໍຮ້ອງທ່ານທັງຫລາຍຜ່ານທາງພວກເຮົາ.
ພວກເຮົາຈຶ່ງອ້ອນວອນຕໍ່ທ່ານ, ເພື່ອເຫັນແກ່ພຣະຄຣິດວ່າ:
"ຈົ່ງຄືນດີກັນກັບພຣະເຈົ້າ!"[21]ພຣະເຈົ້າໄດ້ຊົງເຮັດໃຫ້ພຣະຄຣິດເປັນເຄື່ອງບູຊາສຳລັບໄຖ່ບາບຂອງເຮົາ.
ພຣະອົງຊົງເປັນຜູ້ທີ່ບໍ່ເຄີຍເຮັດບາບເລີຍ. ພຣະເຈົ້າຊົງເຮັດເຊັ່ນນີ້ເພື່ອທີ່ວ່າ ພວກເຮົາຈະໄດ້ກາຍເປັນຄົນຊອບທັມຂອງທ່ານຜ່ານທາງພຣະອົງ.

6 [1]ດັ່ງນັ້ນ ເມື່ອພວກເຮົາເຮັດວຽກຮ່ວມກັນ, ພວກເຮົາຈຶ່ງຂໍຮ້ອງທ່ານວ່າ ຢ່າຮັບແຕ່ພຣະຄຸນຂອງພຣະເຈົ້າໂດຍບໍ່ເກີດປະໂຫຍດໃດໆ.
[2]ເພາະພຣະອົງກ່າວວ່າ, "ໃນເວລາທີ່ພວກເຮົາຊື່ນຊອບ ຂ້າພະເຈົ້າໄດ້ເອົາໃຈໃສ່ທ່ານ, ແລະ
ໃນວັນແຫ່ງຄວາມພົ້ນນັ້ນຂ້າພະເຈົ້າໄດ້ຊ່ວຍທ່ານ." ເບິ່ງເຖີດ, ບັດນີ້ເປັນເວລາແຫ່ງຄວາມຊື່ນຊອບ. ເບິ່ງເຖີດ, ບັດນີ້ ເປັນເວລາແຫ່ງຄວາມພົ້ນ.
[3]ພວກເຮົາບໍ່ໄດ້ວາງກ້ອນຫີນທີ່ຈະເຮັດໃຫ້ສະດຸດໄວ້ຕໍ່ຫນ້າຜູ້ໃດເລີຍ, ເພື່ອງານຂົວລະບັດຂອງພວກເຮົາຈະໄດ້ບໍ່ຖືກຕຳນິ.

[4]ແຕ່ວ່າ, ການກະທຳຂອງພວກເຮົາເອງນັ້ນໄດ້ພິສູດໃຫ້ເຫັນແລ້ວວ່າ, ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະເຈົ້າ.
ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະອົງ, ດ້ວຍຄວາມພຽນອົດທົນຢ່າງຍິ່ງ, ໃນຄວາມທຸກ, ໃນຄວາມຍາກຈົນ, ໃນເຫດໄພພິບັດ,
[5]ໃນການຖືກຂ້ຽນຕີ, ໃນການຖືກຂັງຄຸກ, ໃນເຫດການທີ່ວຸ່ນວາຍ, ໃນການເຮັດວຽກຫນັກຫນ່ວງ, ໃນການອົດຫລັບອົດນອນ,
ໃນການອົດອາຫານ,[6]ໂດຍຄວາມບໍຣິສຸດ, ໂດຍຄວາມຮູ້, ໂດຍຄວາມອົດທົນ, ໂດຍຄວາມເມດຕາ, ໂດຍພຣະວິນຍານບໍຣິສຸດ,
ໂດຍຄວາມຮັກທີ່ຈິງໃຈ.[7]ພວກເຮົາເປັນຜູ້ຮັບໃຊ້ຂອງພຣະອົງ ໂດຍໃຊ້ຖ້ອຍຄຳແຫ່ງຄວາມຈິງ. ໂດຍອຳນາດຂອງພຣະເຈົ້າ
ພວກເຮົາມີອາວຸດແຫ່ງຄວາມຊອບທັມໃນມືຂວາ ແລະ ໃນມືຊ້າຍ.
[8]ພວກເຮົາເຮັດວຽກທັງໃນຂະນະທີ່ມີກຽດ ແລະ ບໍ່ມີກຽດ, ຂະນະທີ່ຖືກດູຖູກ ແລະ ໄດ້ຮັບການຍ້ອງຍໍ.
ເມື່ອພວກເຮົາຖືກກ່າວຫາວ່າເປັນຄົນສໍ້ໂກງ ແຕ່ພວກເຮົາຍັງເປັນຄົນຊື່ສັດຢູ່.[9]ພວກເຮົາເຮັດວຽກຄືກັບວ່າບໍ່ມີໃຜຮູ້ຈັກ.
ແຕ່ກໍ່ຍັງມີຄົນຮູ້ຈັກພວກເຮົາດີ. ພວກເຮົາເຮັດວຽກຄືກັບວ່າກຳລັງຈະຕາຍແຕ່ເບິ່ງເຖີດ! ພວກເຮົາຍັງມີຊີວິດຢູ່.
ພວກເຮົາເຮັດວຽກຄືກັບວ່າພວກເຮົາຖືກລົງໂທດຍ້ອນດ້ວຍການກະທຳຂອງພວກເຮົາແຕ່ຍັງບໍ່ຕາຍ.[10]ເຮົາທຳງານເຫມືອນວ່າມີຄວາມທຸກ
ແຕ່ພວກເຮົາກໍ່ຍັງມີຄວາມຊື່ນຊົມຍິນດີຢູ່ສະເຫມີ. ພວກເຮົາເຮັດວຽກຄືກັບຄົນຍາກຈົນ ແຕ່ຍັງເຮັດໃຫ້ຄົນຫລວງຫລາຍຮັ່ງມີ.
ພວກເຮົາເຮັດວຽກຄືກັບວ່າພວກເຮົາບໍ່ມີຫຍັງເລີຍ ແຕ່ຍັງມີສິ່ງສາລະພັດຢູ່.
[11]ຊາວໂກຣິນໂທເອີຍ ພວກເຮົາເວົ້າກັບທ່ານທັງຫລາຍ, ດ້ວຍຄວາມຈິງທັງຫມົດ, ແລະ ໃຈຂອງພວກເຮົາກໍ່ເປີດກວ້າງ.
[12]ຂ້າພະເຈົ້າບໍ່ໄດ້ປິດໃຈຕໍ່ພວກທ່ານເລີຍ, ແຕ່ຄວາມຮູ້ສຶກຂອງພວກທ່ານຕ່າງຫາກທີ່ເປັນຝ່າຍປິດ.[13]ບັດນີ້
ເພື່ອໃຫ້ການຕອບສະຫນອງເທົ່າທຽມກັນ ຂ້າພະເຈົ້າຂໍເວົ້າກັບທ່ານຄື ເວົ້າກັບລູກໆຄື ຂໍພວກທ່ານຈົ່ງເປີດໃຈໃຫ້ກວ້າງ.
[14]ຢ່າຜູກພັນກັບຄົນທີ່ບໍ່ເຊື່ອ. ເພາະວ່າຄວາມຊອບທຳຈະມີສ່ວນອັນໃດກັບຄວາມບໍ່ຍຸດຕິທຳ? ແລະ
ແສງສະຫວ່າງຈະເຂົ້າສະຫນິດກັບຄວາມມືດໄດ້ແນວໃດ?[15]ພຣະຄຣິດ ກັບ ເບລີອາ? ຈະໄປນຳກັນໄດ້ແນວໃດ? ຫລື
ຄົນທີ່ເຊື່ອຈະມີສ່ວນອັນໃດກັບຄົນທີ່ບໍ່ເຊື່ອ?[16]ແລະ ພຣະວິຫານຂອງພຣະເຈົ້າຈະຕົກລົງອັນໃດກັບຮູບເຄົາຣົບໄດ້?
ເພາະວ່າຂ້າພະເຈົ້າເປັນພຣະວິຫານຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ດັ່ງທີ່ພຣະເຈົ້າກ່າວໄວ້ວ່າ: "ເຮົາຈະຢູ່ກັບພວກເຂົາທັງຫລາຍ ແລະ
ດຳເນີນໃນບັນດາພວກເຂົາ. ເຮົາຈະເປັນພຣະເຈົ້າຂອງເຂົາ ແລະເຂົາຈະເປັນປະຊາຊົນຂອງເຮົາ."
[17]ເຫດສະນັ້ນ, ອົງພຣະຜູ້ເປັນເຈົ້າກ່າວວ່າ. "ຈົ່ງອອກຈາກພວກຄົນເຫລົ່ານັ້ນ," ແລະ ຈົ່ງແຍກໂຕອອກຈາກເຂົາທັງຫລາຍ
ຢ່າແຕະຕ້ອງສິ່ງຊຶ່ງບໍ່ສະອາດ, ແລ້ວເຮົາຈະຮັບພວກເຈົ້າທັງຫລາຍ.[18]ເຮົາຈະເປັນບິດາຂອງພວກເຈົ້າ, ແລະ ພວກເຈົ້າຈະເປັນລູກຊາຍ ແລະ
ລູກສາວຂອງເຮົາ," ອົງພຣະຜູ້ເປັນເຈົ້າຜູ້ຊົງຣິດທານຸພາບທັງຫມົດ," ໄດ້ກ່າວດັ່ງນັ້ນ.

 generated on Tue Jun 17 19:01:42 2025

7 1ທ່ານທີ່ຮັກທັງຫລາຍ, ເມື່ອພວກເຮົາມີພຣະສັນຍາເຫລົ່ານີ້ແລ້ວ
ກໍຂໍໃຫ້ພວກເຮົາຊໍາຣະຕົວຂອງພວກເຮົາໃຫ້ສະອາດຈາກທຸກສິ່ງທີ່ເຮັດໃຫ້ເຮົາເປັນມົນທິນ ທັງໃນຝ່າຍຮ່າງກາຍ ແລະ
ທັງໃນຝ່າຍຈິດວິນຍານ. ໃຫ້ພວກເຮົາດໍາເນີນຊີວິດດ້ວຍຄວາມບໍຣິສຸດໂດຍຄວາມຢໍາເກງພຣະເຈົ້າ.

2ຂໍເປີດໃຈຮັບພວກເຮົາດ້ວຍເຖີດ! ພວກເຮົາບໍ່ໄດ້ເຮັດຜິດຕໍ່ຜູ້ໃດ. ພວກເຮົາບໍ່ໄດ້ທໍາຮ້າຍຜູ້ໃດ ຫລື ເອົາປຽບຜູ້ໃດເລີຍ.
3ຂ້າພະເຈົ້າກ່າວແບບນີ້ບໍ່ແມ່ນເພື່ອຕໍານິທ່ານ. ເພາະຂ້າພະເຈົ້າໄດ້ກ່າວແລ້ວວ່າ ທ່ານຢູ່ໃນໃຈຂອງພວກເຮົາ, ເພາະຖ້າພວກເຮົາຕາຍ
ພວກເຮົາຈະຕາຍດ້ວຍກັນ ແລະ ຖ້າພວກເຮົາມີຊີວິດຢູ່ ພວກເຮົາກໍຈະຢູ່ດ້ວຍກັນ. 4ຂ້າພະເຈົ້າມີຄວາມຫມັ້ນໃຈໃນພວກທ່ານຢ່າງຫລວງຫຼາຍ,
ແລະ ຂ້າພະເຈົ້າມີຄວາມພູມໃຈໃນພວກທ່ານ. ຂ້າພະເຈົ້າໄດ້ຮັບການຊູໃຈ. ຂ້າພະເຈົ້າມີຄວາມຍິນດີຢ່າງລົ້ນເຫລືອ
ແມ່ນແຕ່ໃນຄວາມທຸກຍາກທັງຫມົດຂອງພວກເຮົາ.
5ເພາະວ່າເມື່ອພວກເຮົາມາຮອດແຂວງ ມາເກໂດເນຍ, ຮ່າງກາຍຂອງພວກເຮົາບໍ່ໄດ້ພັກຜ່ອນເລີຍ.
ພວກເຮົາປະສົບກັບຄວາມທຸກຍາກໃນທຸກໆດ້ານ ພາຍນອກກໍມີການຕໍ່ສູ້ ພາຍໃນກໍມີຄວາມຢ້ານກົວ 6ແຕ່ພຣະເຈົ້າ,
ຜູ້ຊຶ່ງເປັນພຣະເຈົ້າແຫ່ງການຊູໃຈຄົນທີ່ທໍ້, ຊົງຫນູນໃຈພວກເຮົາໂດຍການມາຂອງ ຕີໂຕ.
7ພຣະເຈົ້າຊົງຫນູນໃຈພວກເຮົາບໍ່ແມ່ນສະເພາະການມາຂອງ ຕີໂຕ ເທົ່ານັ້ນ. ແຕ່ໂດຍການທີ່ ຕີໂຕ ເອງໄດ້ຮັບການຫນູນໃຈຈາກພວກທ່ານດ້ວຍ.
ລາວໄດ້ບອກພວກເຮົາເຖິງຄວາມຮັກອັນຍິ່ງໃຫຍ່, ແລະ ຄວາມໂສກເສົ້າຂອງທ່ານ, ນອກນີ້ທັງການທີ່ທ່ານເອົາໃຈໃສ່ຕໍ່ຂ້າພະເຈົ້າເປັນຢ່າງດີ.
ເຊິ່ງເຮັດໃຫ້ຂ້າພະເຈົ້າມີຄວາມຊື່ນຊົມຍິນດີຫລາຍຂຶ້ນ.
8ເພາະເຖິງແມ່ນວ່າຂ້າພະເຈົ້າໄດ້ເຮັດໃຫ້ທ່ານທຸກໃຈດ້ວຍຈົດຫມາຍສະບັບນັ້ນ, ຂ້າພະເຈົ້າກໍບໍ່ກິນແຫນງ
ຂ້າພະເຈົ້າອາດຈະກິນແຫນງເລັກນ້ອຍ ເມື່ອຂ້າພະເຈົ້າເຫັນຈົດຫມາຍສະບັບນັ້ນເຮັດໃຫ້ພວກທ່ານທຸກໃຈ.
ແຕ່ພວກທ່ານຈະມີຄວາມທຸກໃຈຢູ່ພຽງເວລາສັ້ນໆເທົ່ານັ້ນ. 9ຕອນນີ້ຂ້າພະເຈົ້າມີຄວາມສຸກ, ບໍ່ແມ່ນເພາະວ່າພວກທ່ານທຸກໃຈ,
ແຕ່ເພາະວ່າຄວາມທຸກໃຈນັ້ນໄດ້ນໍາພາໃຫ້ທ່ານກັບໃຈໃຫມ່. ທ່ານທັງຫລາຍໄດ້ຮັບຄວາມທຸກໃຈຕາມພຣະປະສົງຂອງພຣະເຈົ້າ, ດັ່ງນັ້ນ
ທ່ານຈຶ່ງບໍ່ໄດ້ຮັບຜົນຮ້າຍຈາກພວກເຮົາເລີຍ. 10ເພາະວ່າຄວາມທຸກໃຈຕາມພຣະປະສົງຂອງພຣະເຈົ້ານັ້ນ
ເຮັດໃຫ້ມີການກັບໃຈເຊິ່ງນໍາໄປສູ່ຄວາມພົ້ນ. ຈຶ່ງບໍ່ເຮັດໃຫ້ທຸກໃຈ, ແຕ່ການກັບໃຈຝ່າຍໂລກນັ້ນ, ຈະນໍາພາໄປສູ່ຄວາມຕາຍ.
11ຂໍຈົ່ງພິຈາລະນາເບິ່ງວ່າຄວາມທຸກໃຈ ຕາມທີ່ຊອບພຣະໄທພຣະເຈົ້ານັ້ນ. ເຮັດໃຫ້ເກີດຄວາມຫມັ້ນຫມັ້ນຫລາຍເທົ່າໃດ
ຄວາມຫມັ້ນຫມັ້ນໃນການທີ່ຈະພິສູດຕົວເອງວ່າເປັນຜູ້ບໍຣິສຸດນັ້ນມີຫລາຍເທົ່າໃດ. ຄວາມເຄືອງໃຈຂອງທ່ານ, ຄວາມຢ້ານກົວຂອງທ່ານ,
ຄວາມປາຖະຫນາອັນແຮງກ້າຂອງທ່ານ, ຄວາມກະຕືລືລົ້ນຂອງທ່ານ, ແລະ
ຄວາມປາຖະຫນາຂອງທ່ານທີ່ຈະໄດ້ເຫັນການລົງໂທດທີ່ຈະເກີດຂຶ້ນນັ້ນມີຫລາຍເທົ່າໃດ!
ພວກທ່ານໄດ້ພິສູດໃຫ້ເຫັນໃນທຸກດ້ານແລ້ວວ່າພວກທ່ານເປັນຜູ້ບໍ່ມີຄວາມຜິດຫຍັງໃນເລື່ອງນີ້. 12ເຖິງແມ່ນວ່າຂ້າພະເຈົ້າໄດ້ຂຽນເຖິງທ່ານ,
ຂ້າພະເຈົ້າບໍ່ໄດ້ຂຽນເພາະເຫັນແກ່ຄົນທີ່ຕ້ອງອົດທົນຕໍ່ຄວາມຊົ່ວຮ້າຍ.
ແຕ່ຂ້າພະເຈົ້າຂຽນເພື່ອໃຫ້ຄວາມກະຕືລືລົ້ນທີ່ພວກທ່ານມີຕໍ່ຂ້າພະເຈົ້າປະກົດແກ່ພວກທ່ານໃນສາຍພຣະເນດຂອງພຣະເຈົ້າ.
13ເພາະເຫດນີ້ ພວກເຮົາຈຶ່ງໄດ້ຮັບການສະຫນັບສະຫນູນ. ນອກຈາກຄວາມຊູໃຈແລ້ວ, ພວກເຮົາຍັງມີຄວາມຊື່ນຊົມຍິນດີຫລາຍຕື່ມຂຶ້ນອີກ,
ເນື່ອງຈາກຄວາມຍິນດີຂອງ ຕີໂຕ ເພາະວ່າພວກທ່ານທຸກຄົນໄດ້ເຮັດໃຫ້ວິນຍານຂອງລາວຊື່ນບານ.
14ເພາະຖ້າຂ້າພະເຈົ້າໄດ້ອວດອ້າງເລື່ອງຂອງພວກທ່ານແກ່ ຕີໂຕ, ຂ້າພະເຈົ້າກໍບໍ່ມີຄວາມລະອາຍເລີຍ. ເພາະໃນທາງກົງກັນຂ້າມ,
ທຸກສິ່ງທີ່ຂ້າພະເຈົ້າໄດ້ກ່າວກັບທ່ານນັ້ນເປັນຄວາມຈິງ, ສິ່ງທີ່ຂ້າພະເຈົ້າໄດ້ອວດອ້າງເລື່ອງພວກທ່ານແກ່ ຕີໂຕ
ກໍໄດ້ຮັບການພິສູດແລ້ວວ່າເປັນຄວາມຈິງສັນນັ້ນ.
15ຄວາມຮັກຂອງລາວທີ່ມີຕໍ່ພວກທ່ານນັ້ນກໍເພີ່ມພູນຂຶ້ນ,
ເມື່ອລາວລະນຶກເຖິງຄວາມເຊື່ອຟັງຂອງພວກທ່ານທຸກຄົນດ້ວຍການທີ່ພວກທ່ານໃຫ້ການຕ້ອນຮັບລາວ, ດ້ວຍຄວາມຢໍາເກງ ແລະ ຕົວສັ່ນ.
16ຂ້າພະເຈົ້າຊື່ນຊົມຍິນດີ ເພາະວ່າຂ້າພະເຈົ້າໄວ້ໃຈທ່ານໄດ້ໃນທຸກຢ່າງ.


generated on Tue Jun 17 19:01:42 2025

8 1ພີ່ນ້ອງທັງຫລາຍ, ພວກເຮົາຕ້ອງການໃຫ້ທ່ານຮູ້ເຖິງ, ພຣະຄຸນຂອງພຣະເຈົ້າທີ່ຊົງປະທານໃຫ້ແກ່ຄຣິສຕະຈັກຕ່າງໆຂອງແຂວງ
ມາເກໂດເນຍ. 2ເພາະວ່າໃນລະຫວ່າງທີ່ພວກເຂົາຖືກທົດລອງຢ່າງຫນັກ, ຈາກຄວາມທຸກຍາກລຳບາກນັ້ນ ຄວາມຍິນດີທີ່ເຕັມລົ້ນຂອງລາວ
ແລະ ຄວາມທຸກຍາກທີ່ສຸດນັ້ນ ກໍລົ້ນອອກມາໄດ້ເປັນໃຈທີ່ກວ້າງໃຫຍ່ໄພສານ.

3ເພາະຂ້າພະເຈົ້າເປັນພະຍານໄດ້ວ່າ ພວກເຂົາໄດ້ຖວາຍເຕັມທີ່ເທົ່າທີ່ພວກເຂົາສາມາດຖວາຍໄດ້, ແລະ
ທີ່ຈິງແລ້ວກໍສຸດຄວາມສາມາດຂອງພວກເຂົາເອງ. ແລະ ເຮັດດ້ວຍຄວາມສະຫມັກໃຈ 4ພວກເຂົາວອນຂໍພວກເຮົາຢ່າງຫລວງຫຼາຍ.
ຂໍໃຫ້ເຂົາໄດ້ມີໂອກາດໃນການແບ່ງປັນເພື່ອຊ່ວຍເຫລືອໄພ່ພົນໃນພາລະກິດນີ້ດ້ວຍ. 5ເຊິ່ງບໍ່ຄືກັບທີ່ພວກເຮົາຄາດຫວັງໄວ້.
ແຕ່ພວກເຂົາໄດ້ຖວາຍຕົວເອງແດ່ອົງພຣະຜູ້ເປັນເຈົ້າກ່ອນ. ຫລັງຈາກນັ້ນ, ຈຶ່ງມອບຕົວໃຫ້ກັບພວກເຮົາຕາມພຣະປະສົງຂອງພຣະເຈົ້າ.
6ຂ້າພະເຈົ້າຈຶ່ງໄດ້ເຕືອນ ຕີໂຕ ວ່າ, ເມື່ອລາວໄດ້ເລີ່ມຕົ້ນເລື່ອງນີ້ແລ້ວ, ກໍໃຫ້ລາວເຮັດການກຸສົນນັ້ນກັບທ່ານທັງຫລາຍ.
7ພວກທ່ານມີພ້ອມສົມບູນທຸກຢ່າງທັງຄວາມເຊື່ອໃນຖ້ອຍຄຳ, ໃນຄວາມຮູ້, ໃນຄວາມກະຕືລືລົ້ນ, ແລະ
ໃນຄວາມຮັກຂອງທ່ານທັງຫລາຍທີ່ມີຕໍ່ພວກເຮົາ. ດັ່ງນັ້ນທ່ານທັງຫລາຍກໍຈົ່ງເຮັດການກຸສົນນີ້ຢ່າງເຕັມລົ້ນເຊັ່ນກັນເຖີດ.
8ຂ້າພະເຈົ້າບໍ່ໄດ້ເວົ້າເປັນຄຳສັ່ງ. ແຕ່ໄດ້ນຳເລື່ອງຂອງຄົນອື່ນທີ່ມີຄວາມກະຕືລືລົ້ນມາທົດສອບຄວາມຮັກຂອງທ່ານທັງຫລາຍວ່າ
ມີຄວາມຈິງໃຈຫລືບໍ່. 9ເພາະວ່າທ່ານທັງຫລາຍຮູ້ຈັກພຣະຄຸນຂອງພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາວ່າ.
ເຖິງວ່າພຣະອົງຈະຮັ່ງມີ, ພຣະອົງກໍຍັງຊົງຍອມເປັນຄົນຍາກຈົນ, ເພື່ອເຫັນແກ່ທ່ານທັງຫລາຍ ເພື່ອທີ່ວ່າພວກທ່ານຈະໄດ້ກາຍເປັນຄົນຮັ່ງມີ
ເນື່ອງຈາກ ຄວາມຍາກຈົນຂອງພຣະອົງ.
10ສະນັ້ນ, ຂ້າພະເຈົ້າຈຶ່ງຂໍສະແດງຄວາມຄິດເຫັນໃນເລື່ອງນີ້ ເພື່ອທີ່ຈະເປັນປະໂຫຍດແກ່ພວກທ່ານວ່າ ເລື່ອງທີ່ທ່ານໄດ້ເລີ່ມຕົ້ນເມື່ອປີກາຍນີ້,
ພວກທ່ານບໍ່ໄດ້ພຽງເລີ່ມຕົ້ນທີ່ຈະເຮັດບາງຢ່າງເທົ່ານັ້ນ, ແຕ່ພວກທ່ານຍັງປາຖະຫນາທີ່ຈະເຮັດດ້ວຍ.
11ບັດນີ້ພວກທ່ານກໍຄວນທີ່ຈະເຮັດໃຫ້ສຳເລັດເສັຍ. ພວກທ່ານມີຄວາມກະຕືລືລົ້ນ ແລະ ຄວາມປາຖະຫນາທີ່ຈະເຮັດສັນໃດ,
ກໍຂໍໃຫ້ທ່ານປະສົບຜົນສຳເລັດເທົ່າທີ່ເຮັດໄດ້ສັນນັ້ນ. 12ເພາະວ່າຖ້າມີຄວາມກະຕືລືລົ້ນທີ່ຈະເຮັດສິ່ງນີ້ແລ້ວ. ກໍຖືວ່າເປັນສິ່ງທີ່ດີ ແລະຫນ້າພໍໃຈ
ການໃຫ້ນັ້ນຕ້ອງໃຫ້ຕາມທີ່ເຂົາມີຢູ່, ບໍ່ແມ່ນຕາມທີ່ເຂົາບໍ່ມີ.
13ຂ້າພະເຈົ້າບໍ່ໄດ້ຫມາຍຄວາມວ່າ ຈະໃຫ້ວຽກຂອງຄົນອື່ນເບົາລົງ ແລະ ໃຫ້ວຽກຂອງພວກທ່ານຫນັກຂຶ້ນ.
ແຕ່ເພື່ອໃຫ້ເປັນການສະເຫມີກັນ 14ເພາະວ່າໃນຄາວທີ່ພວກທ່ານມີຢ່າງອຸດົມສົມບູນຄືກັບເວລານີ້
ທ່ານກໍຄວນຈະຊ່ວຍເຫລືອຄົນເຫລົ່ານັ້ນທີ່ຂັດສົນ, ແລະ ໃນເວລາທີ່ພວກເຂົາມີຢ່າງອຸດົມສົມບູນ ພວກເຂົາກໍຈະໄດ້ຊ່ວຍພວກທ່ານຍາມຂັດສົນ
ຊຶ່ງຖືວ່າມີຄວາມຍຸດຕິທຳ. 15ຕາມທີ່ມີຂຽນໄວ້ວ່າ: "ຄົນທີ່ເກັບໄດ້ຫລາຍກໍບໍ່ມີຫຍັງເຫລືອ, ແລະ ຄົນທີ່ເກັບໄດ້ຫນ້ອຍກໍບໍ່ຂາດເຂີນ."
16ແຕ່ຂອບພຣະຄຸນພຣະເຈົ້າ, ຜູ້ຊົງໃຫ້ ຕີໂຕ ມີໃຈກະຕືລືລົ້ນໃນຄວາມຫວ່ງໃຍຢ່າງດຽວກັນກັບທີ່ຂ້າພະເຈົ້າມີຕໍ່ພວກທ່ານ.
17ເພາະວ່າເຂົາບໍ່ພຽງແຕ່ຮັບຄຳຂໍຮ້ອງຂອງພວກເຮົາເທົ່ານັ້ນ, ແຕ່ຍັງມີຄວາມກະຕືລືລົ້ນຫລາຍ.
ເຂົາໄດ້ໄປຫາພວກທ່ານດ້ວຍຄວາມສະຫມັກໃຈ.
18ເຮົາສົ່ງພີ່ນ້ອງຄົນຫນຶ່ງໃນຄຣິສຕະຈັກທຸກແຫ່ງ ທີ່ໄດ້ຮັບການຍ້ອງຍໍໃນເລື່ອງການປະກາດຂ່າວປະເສີດໄປພ້ອມກັບ ຕີໂຕ ດ້ວຍ. 19ແລະ
ບໍ່ພຽງເທົ່ານີ້, ຄຣິສຕະຈັກຕ່າງໆຍັງໄດ້ເລືອກໃຫ້ລາວເປັນຜູ້ຮ່ວມເດີນທາງກັບພວກເຮົາ ແລະ ເປັນຜູ້ຮ່ວມງານໃນການເຮັດຄວາມດີນີ້.
ເຊິ່ງພວກເຮົາເຮັດສິ່ງນີ້ເພື່ອຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າ ແລະ ສະແດງເຖິງຄວາມກະຕືລືລົ້ນຂອງພວກເຮົາໃນການຊ່ວຍເຫລືອ.
20ພວກເຮົາຫລີກລ້ຽງທີ່ຈະບໍ່ໃຫ້ຄົນໃດຄົນຫນຶ່ງເຕືອນພວກເຮົາໄດ້ໃນເລື່ອງກ່ຽວກັບຂອງຖວາຍຫລາຍຢ່າງ ເຊິ່ງພວກເຮົາຮັບມາແຈກຢາຍນັ້ນ.
21ພວກເຮົາລະມັດລະວັງທີ່ຈະເຮັດດ້ວຍຄວາມຊື່ສັດ, ເຊິ່ງບໍ່ພຽງສະເພາະໃນສາຍພຣະເນດຂອງອົງພຣະຜູ້ເປັນເຈົ້າເທົ່ານັ້ນ,
ແຕ່ໃນສາຍຕາຂອງມະນຸດອີກດ້ວຍ.
22ພວກເຮົາໄດ້ສົ່ງພີ່ນ້ອງອີກຄົນຫນຶ່ງໄປນຳກັນກັບເຂົາທັງສອງ. ລາວເປັນຄົນທີ່ຖືກຂ້າພະເຈົ້າທົດສອບຢູ່ເລື້ອຍໆ, ແລະ
ພວກເຮົາເຫັນວ່າລາວມີຄວາມກະຕືລືລົ້ນໃນຫຼາຍຢ່າງ. ແລະ ດຽວນີ້ລາວມີຄວາມກະຕືລືລົ້ນຫລາຍຂຶ້ນ
ທັງນີ້ເພາະວ່າລາວມີຄວາມໄວ້ວາງໃຈໃນທ່ານຫລາຍ. 23ສ່ວນ ຕີໂຕ, ລາວເປັນຄູ່ຮ່ວມງານ ແລະ
ເປັນຜູ້ຮ່ວມງານຂອງຂ້າພະເຈົ້າໃນການຮັບໃຊ້ທ່ານທັງຫລາຍ. ສ່ວນພີ່ນ້ອງສອງຄົນນັ້ນ, ຄຣິສຕະຈັກຕ່າງໆໄດ້ສົ່ງພວກເຂົາໄປ. ແລະ
ພວກເຂົາກໍໄດ້ຖວາຍກຽດແດ່ພຣະຄຣິດ. 24ເຫດສະນັ້ນ ຈົ່ງສະແດງຄວາມຮັກຂອງທ່ານແກ່ພວກເຂົາ, ແລະ
ສຳແດງໃຫ້ຄຣິສຕະຈັກທັງຫລາຍໄດ້ເຫັນວ່າ ເປັນການສົມຄວນແລ້ວທີ່ພວກເຮົາໄດ້ອວດອ້າງເລື່ອງພວກທ່ານໃຫ້ເຂົາຟັງ.


generated on Tue Jun 17 19:01:42 2025

9 [1]ຂ້າພະເຈົ້າບໍ່ຈຳເປັນຕ້ອງຂຽນເຖິງທ່ານ. ໃນເລື່ອງການສົ່ງເຄາະບັນດາຜູ້ທີ່ເຊື່ອ,[2]ເພາະວ່າຂ້າພະເຈົ້າຮູ້ເຖິງຄວາມປາຖະໜາຂອງທ່ານ,
ເຊິ່ງຂ້າພະເຈົ້າເຄີຍອ້າງເລື່ອງພວກທ່ານໃຫ້ກັບຊາວ ມາເກໂດເນຍ ຟັງແລ້ວ. ຊາວເມືອງອະຂາຢາ ໄດ້ກະກຽມໄວ້ພ້ອມແລ້ວຕັ້ງແຕ່ປີກາຍ.
ແລະ ຄວາມກະຕືລືລົ້ນຂອງທ່ານກໍໄດ້ບັນດານໃຈຄົນເປັນຈຳນວນຫລາຍໃຫ້ເຮັດຕາມ.

[3]ແລະບັດນີ້ຂ້າພະເຈົ້າສົ່ງພີ່ນ້ອງເຫລົ່ານີ້ໄປ ເພື່ອບໍ່ໃຫ້ການອວດຂອງຂ້າພະເຈົ້ານັ້ນເສັຍຄ່າໄປ, ແລະ ເພື່ອໃຫ້ພວກທ່ານກະກຽມໄວ້ໃຫ້ພ້ອມ,
ຕາມທີ່ຂ້າພະເຈົ້າໄດ້ກ່າວໄວ້ແລ້ວວ່າ ພວກທ່ານຈະພ້ອມ.[4]ຖ້າບໍ່ດັ່ງນັ້ນແລ້ວ, ຖ້າຫາກມີຊາວ ມາເກໂດເນຍ ຄົນໃດມາກັບຂ້າພະເຈົ້າ ແລະ
ພົບວ່າທ່ານຍັງບໍ່ໄດ້ກຽມໃຫ້ພ້ອມ, ພວກເຮົາກໍຈະຂາຍໜ້າ ຂ້າພະເຈົ້າບໍ່ໄດ້ກ່າວຫາທ່ານເລີຍເພາະວ່າຂ້າພະເຈົ້າມີຄວາມໝັ້ນໃຈພວກທ່ານ.
[5]ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງຄິດວ່າ ຈຳເປັນຕ້ອງຂໍຮ້ອງໃຫ້ພີ່ນ້ອງເຫລົ່ານີ້ ເພື່ອໃຫ້ໄປຫາພວກທ່ານ ແລະ
ໃຫ້ກະກຽມຂອງຖວາຍລ່ວງໜ້າຕາມທີ່ທ່ານໄດ້ສັນຍາໄວ້ແລ້ວ. ເພື່ອຂອງຖວາຍນັ້ນຈະມີຢູ່ພ້ອມເພື່ອເປັນພຣະພອນ, ແລະ
ບໍ່ແມ່ນເປັນສິ່ງທີ່ຝືນໃຈ.
[6]ເພາະນີ້ແຫລະ: ຄົນທີ່ຫວ່ານໜ້ອຍກໍຈະເກັບກ່ຽວໄດ້ພຽງເລັກໜ້ອຍ, ແລະ ຄົນທີ່ຫວ່ານເພື່ອຈະໄດ້ຮັບພຣະພອນ
ກໍຈະໄດ້ເກັບກ່ຽວພຣະພອນດ້ວຍ.[7]ຈົ່ງໃຫ້ແຕ່ລະຄົນໃຫ້ຕາມທີ່ຕົນຄິດໄວ້ໃນໃຈ. ຢ່າໃຫ້ດ້ວຍຄວາມເສຍດາຍ ຫລື ດ້ວຍຄວາມຝືນໃຈ.
ເພາະວ່າພຣະເຈົ້າຊົງຮັກຄົນທີ່ໃຫ້ດ້ວຍໃຈຍິນດີ.
[8]ແລະ ພຣະເຈົ້າສາມາດປະທານພຣະພອນທຸກຢ່າງແກ່ທ່ານທັງຫລາຍ. ເພື່ອວ່າ, ໃຫ້ພວກທ່ານມີທຸກສິ່ງທຸກຢ່າງ, ພຽງພໍສຳລັບຕົວສະເໝີ,
ທັງຈະມີສິ່ງຂອງຢ່າງສົມບູນ. ສຳລັບການງານທີ່ດີທຸກຢ່າງດ້ວຍ.[9]ຕາມທີ່ຂຽນໄວ້ວ່າ: "ລາວແຈກຢາຍຊັບສົມບັດຂອງຕົນແກ່ຄົນທຸກຍາກ.
ຄວາມຊອບທຳຂອງລາວດຳລົງຢູ່ເປັນນິດ."
[10]ຝ່າຍພຣະອົງ ຜູ້ໄດ້ປະທານເມັດພືດແກ່ຜູ້ຫວ່ານ ແລະ ປະທານອາຫານໃຫ້ແກ່ຄົນທີ່ກິນນັ້ນ,
ຈະຊົງເພີ່ມພູນເມັດພືດຂອງທ່ານເພື່ອການຫວ່ານ. ທັງຈະຊົງໃຫ້ການເກັບກ່ຽວຜົນແຫ່ງຄວາມຊອບທຳຂອງທ່ານຈະເລີນຂຶ້ນດ້ວຍ.
[11]ທ່ານຈະມີຄວາມຮັ່ງມີໃນທຸກທາງ. ເພື່ອໃຫ້ທ່ານສາມາດແຈກຢາຍດ້ວຍໃຈເອື້ອເຟື້ອເພື່ອແຜ່
ຊຶ່ງຈະນຳໄປສູ່ການຂອບພຣະຄຸນພຣະເຈົ້າຜ່ານທາງພວກເຮົາ.
[12]ບໍ່ແມ່ນພຽງເພື່ອການຈັດຫາໃຫ້ກັບຜູ້ທີ່ເຊື່ອທີ່ຂັດສົນເທົ່ານັ້ນ. ແຕ່ຍັງເຮັດໃຫ້ມີການຂອບພຣະຄຸນພຣະເຈົ້າຢ່າງຫລວງຫລາຍດ້ວຍ.
[13]ເພາະວ່າການທີ່ພວກທ່ານໄດ້ຖືກທົດລອງ ແລະ ພິສູດໂດຍການຮັບໃຊ້ນີ້,
ພວກທ່ານຈະໄດ້ຖວາຍພຣະກຽດແດ່ພຣະເຈົ້າໂດຍການທີ່ພວກທ່ານເຊື່ອຟັງດ້ວຍການຍອມຮັບໃນຂ່າວປະເສີດຂອງພຣະຄຣິດ.
ພ້ອມກັນນີ້ທ່ານທັງຫລາຍຈະໄດ້ຖວາຍພຣະກຽດແດ່ພຣະເຈົ້າໂດຍການຖວາຍດ້ວຍໃຈເອື້ອເຟື້ອເພື່ອແຜ່ໃຫ້ແກ່ພວກເຂົາ ແລະ ທຸກຄົນດ້ວຍ.
[14]ພວກເຂົາຈະອະທິຖານເພື່ອທ່ານ, ແລະ ຄິດຮອດເຖິງທ່ານ. ລາວເຮັດແບບນີ້ກໍເພາະວ່າພຣະຄຸນອັນລ້ຳຄ່າຂອງພຣະເຈົ້າສະຖິດຢູ່ໃນທ່ານ.
[15]ຈົ່ງຂອບພຣະຄຸນພຣະເຈົ້າ ສຳລັບຂອງປະທານອັນເຫລືອທີ່ຈະພັນລະນາຂອງພຣະອົງ!


generated on Tue Jun 17 19:01:42 2025

10 1ຂ້າພະເຈົ້າ, ໂປໂລ, ໃຜທີ່ຈະຂໍຮ້ອງພວກທ່ານທັງຫລາຍ, ດ້ວຍຕົວຂອງຂ້າພະເຈົ້າເອງ, ໂດຍເຫັນແກ່ຄວາມອ່ອນສຸພາບ ແລະ
ພຣະກະລຸນາຂອງພຣະຄຣິດ. ຂ້າພະເຈົ້າເປັນຜູ້ທີ່ອ່ອນນ້ອມຖ່ອມຕົວເມື່ອຢູ່ກັບທ່ານທັງຫລາຍ, ແຕ່ເມື່ອຢູ່ຄົນດຽວກໍເປັນຄົນກ້າຫານ.
2ຂ້າພະເຈົ້າຈຶ່ງຂໍຮ້ອງພວກທ່ານວ່າ, ເມື່ອຂ້າພະເຈົ້າຢູ່ກັບທ່ານນັ້ນ, ຢ່າໃຫ້ຂ້າພະເຈົ້າຕ້ອງຫ້າວຫັນຕໍ່ພວກທ່ານດ້ວຍຄວາມໝັ້ນໃຈໃນຕົວເອງ.
ຂ້າພະເຈົ້າຄິດວ່າຂ້າພະເຈົ້າຈະຕ້ອງຫ້າວຫັນເມື່ອຕ້ອງຂັດແຍ້ງກັບບາງຄົນທີ່ຄິດວ່າເຮົາດຳລົງຊີວິດຕາມເນື້ອຫນັງ.

3ເພາະວ່າ ເຖິງແມ່ນວ່າພວກເຮົາຈະດຳລົງຊີວິດໃນຝ່າຍເນື້ອຫນັງ, ແຕ່ພວກເຮົາກໍບໍ່ໄດ້ສູ້ຮົບຕາມແບບເນື້ອຫນັງນັ້ນ.4ເພາະວ່າ
ອາວຸດທີ່ຂ້າພະເຈົ້າໃຊ້ຕໍ່ສູ້ນັ້ນບໍ່ໄດ້ເປັນແບບເນື້ອຫນັງ. ແຕ່ເປັນ, ຣິດທານຸພາບຈາກພຣະເຈົ້າທີ່ສາມາດທຳລາຍປ້ອມປາການຕ່າງໆໄດ້.
ຄືທຳລາຍເຫດຜົນອັນບໍ່ຈິງທັງຫລາຍ.
5ຄືທຳລາຍຄວາມຄິດທຸກຢ່າງທີ່ຕັ້ງຂຶ້ນເພື່ອຂັດຂວາງຄວາມຮູ້ຂອງພຣະເຈົ້າ. ແລະ ຊັກຈູງຄວາມຄິດທຸກປະການໃຫ້ມາເຊື່ອຟັງພຣະຄຣິດ.6ແລະ
ພວກເຮົາພ້ອມທີ່ຈະລົງໂທດໃນທຸກການກະທຳທີ່ບໍ່ເຊື່ອຟັງ, ທັນທີທີ່ຄວາມເຊື່ອຂອງພວກທ່ານສົມບູນ.
7ຈົ່ງເບິ່ງສິ່ງທີ່ປາກົດຢູ່ຕໍ່ຫນ້າທ່ານ. ຖ້າຜູ້ໃດຫມັ້ນໃຈວ່າຕົນເອງເປັນຄົນຂອງພຣະຄຣິດ, ກໍໃຫ້ຜູ້ນັ້ນພິຈາລະນາຕົນເອງວ່າ
ເມື່ອເຂົາເປັນຄົນຂອງພຣະຄຣິດ, ພວກເຮົາກໍເປັນຄົນຂອງພຣະຄຣິດດ້ວຍເຊັ່ນກັນ.
8ເຖິງແມ່ນວ່າຂ້າພະເຈົ້າຈະອວດຫລາຍໄປກ່ຽວກັບສິດອຳນາດ. ເຊິ່ງອົງພຣະຜູ້ເປັນເຈົ້າຊົງປະທານໃຫ້ກັບພວກເຮົາເພື່ອໃຫ້ເສີມສ້າງພວກທ່ານ
ແລະ ບໍ່ແມ່ນເພື່ອທຳລາຍພວກທ່ານ, ຂ້າພະເຈົ້າກໍຈະບໍ່ໄດ້ຮັບຄວາມອັບອາຍ.
9ຂ້າພະເຈົ້າບໍ່ຕ້ອງການທີ່ຈະປະກົດຕົວໃຫ້ເຫັນຄືກັບວ່າຂ້າພະເຈົ້າໄດ້ເຮັດໃຫ້ພວກທ່ານຢ້ານກົວ ເພາະຈົດຫມາຍຂອງຂ້າພະເຈົ້າ.
10ຕາມທີ່ບາງຄົນເວົ້າວ່າ, "ຈົດຫມາຍຂອງ ໂປໂລ ນັ້ນເບິ່ງຈິງຈັງ, ແລະ ມີພະລັງອຳນາດ, ແຕ່ວ່າຕົວລາວເບິ່ງອ່ອນກຳລັງ.
ຄຳເວົ້າຂອງລາວກໍບໍ່ຄຸນຄ່າແກ່ການຟັງ."
11ຈົ່ງໃຫ້ຄົນເຫລົ່ານັ້ນເຂົ້າໃຈຢ່າງນີ້ວ່າ ພວກເຮົາເວົ້າໄວ້ໃນຈົດຫມາຍຢ່າງໃດເມື່ອພວກເຮົາບໍ່ຢູ່
ພວກເຮົາກໍຈະເຮັດຢ່າງນັ້ນເມື່ອພວກເຮົາຢູ່ເຊັ່ນກັນ.12ພວກເຮົາຈະບໍ່ທຽບໃສ່ ຫລື ປຽບທຽບຕົວເຮົາເອງກັບຄົນທີ່ຍ້ອງຍໍໂຕເອງ.
ແຕ່ເມື່ອພວກເຂົາເອົາຕົວເອງເປັນເຄື່ອງວັດກັນ ແລະ ກັນ ແລະ ເອົາຕົວເອງປຽບທຽບກັນ ແລະ ກັນ, ພວກເຂົາກໍເປັນຄົນທີ່ຂາດຄວາມເຂົ້າໃຈ.
13ເຖິງຢ່າງໃດກໍຕາມ, ພວກເຮົາ, ຈະບໍ່ອວດອ້າງເກີນຂອບເຂດ. ແຕ່ຈະອວດອ້າງໃນຂອບເຂດທີ່ພຣະເຈົ້າຊົງຈັດແຈງໄວ້ໃຫ້ພວກເຮົາ,
ເຊິ່ງພວກທ່ານກໍຢູ່ໃນຂອບເຂດນັ້ນດ້ວຍ.14ເພາະວ່າເມື່ອພວກເຮົາມາຫາພວກທ່ານນັ້ນ ພວກເຮົາເອງບໍ່ໄດ້ລ່ວງລ້ຳຂອບເຂດ. ແລະ
ພວກເຮົາເປັນພວກທຳອິດທີ່ໄດ້ນຳຂ່າວປະເສີດຂອງພຣະຄຣິດມາຮອດທ່ານທັງຫລາຍ.
15ພວກເຮົາບໍ່ໄດ້ໂອ້ອວດເກີນຂອບເຂດ ກ່ຽວກັບວຽກງານທີ່ຄົນອື່ນໄດ້ເຮັດ. ແຕ່ພວກເຮົາມີຄວາມຫວັງວ່າ
ເມື່ອຄວາມເຊື່ອຂອງພວກທ່ານຈະເລີນຂຶ້ນຫລາຍແລ້ວ, ຂອບເຂດງານຂອງພວກເຮົາກໍຈະຂະຫຍາຍຢ່າງກວ້າງຂວາງໃນຫມູ່ພວກທ່ານ.16ດັ່ງນັ້ນ
ເມື່ອພວກເຮົາມີຄວາມຫວັງຢ່າງນີ້, ພວກເຮົາກໍຈະປະກາດຂ່າວປະເສີດນອກເຂດທີ່ພວກທ່ານຢູ່.
ໂດຍພວກເຮົາຈະບໍ່ອວດອ້າງໃນເລື່ອງການງານທີ່ຄົນອື່ນໄດ້ເຮັດໄວ້ແລ້ວ.
17“ແຕ່ຈົ່ງໃຫ້ຜູ້ທີ່ອວດນັ້ນ, ໄດ້ອວດອົງພຣະຜູ້ເປັນເຈົ້າເຖີດ.”18ເພາະວ່າຄົນທີ່ຍົກຍ້ອງຕົວເອງຈະບໍ່ໄດ້ຮັບການຮັບຮອງ. ແຕ່,
ຄົນທີ່ອົງພຣະຜູ້ເປັນເຈົ້າຍົກຍ້ອງຕ່າງຫາກຈະເປັນຄົນທີ່ໄດ້ຮັບການຮັບຮອງ.


generated on Tue Jun 17 19:01:42 2025

11 1ຂ້າພະເຈົ້າຢາກຂໍໃຫ້ພວກທ່ານອົດທົນຕໍ່ຄວາມໂງ່ຈ້າເລັກໆນ້ອຍໆຂອງຂ້າພະເຈົ້າ. ເຊິ່ງທີ່ຈິງພວກທ່ານກໍອົດທົນຢູ່ແລ້ວ!
2ເພາະວ່າຂ້າພະເຈົ້າຫວງແຫນພວກທ່ານທັງຫລາຍ. ດັ່ງທີ່ພຣະເຈົ້າຫວງແຫນ,
ເພາະວ່າຂ້າພະເຈົ້າໄດ້ຫມັ້ນພວກທ່ານໄວ້ກັບສາມີຄົນດຽວ. ເພື່ອຖວາຍພວກທ່ານໃນຖານະເປັນຍິງສາວບໍຣິສຸດແດ່ພຣະຄຣິດ.

3ແຕ່ຂ້າພະເຈົ້າຢ້ານວ່າງູໄດ້ລໍ້ລວງ ເອວາ, ດ້ວຍກົນອຸບາຍຂອງມັນສັນໃດ,
ຄວາມຄິດຂອງທ່ານທັງຫລາຍກໍອາດຈະເຮັດໃຫ້ຫລົງໄປຈາກຄວາມສັດຊື່ ແລະ ຄວາມບໍຣິສຸດຕໍ່ພຣະຄຣິດສັນນັ້ນ.4ເພາະວ່າມີບາງຄົນມາ ແລະ
ປະກາດເຖິງພຣະເຢຊູອີກອົງຫນຶ່ງ ນອກເຫນືອຈາກພຣະເຢຊູຄຣິດເຈົ້າ ທີ່ພວກເຮົາເຄີຍປະກາດມາ. ຫລື
ພວກທ່ານຮັບພຣະວິນຍານທີ່ແຕກຕ່າງຈາກທີ່ທ່ານເຄີຍຮັບມານັ້ນ. ຫລື
ພວກທ່ານຮັບຂ່າວປະເສີດອື່ນທີ່ແຕກຕ່າງຈາກທີ່ພວກທ່ານເຄີຍໄດ້ຮັບແລ້ວນັ້ນ. ທ່ານທັງຫລາຍກໍມີຄວາມອົດທົນດີແທ້ໆ.
5ເພາະຂ້າພະເຈົ້າຄິດວ່າ ຂ້າພະເຈົ້າບໍ່ໄດ້ດ້ອຍກວ່າບັນດາຄົນເຫລົ່ານັ້ນທີ່ຖືກເອີ້ນວ່າອັກຄະສາວົກພິເສດແມ້ແຕ່ຫນ້ອຍດຽວ.
6ເຖິງແມ່ນວ່າຂ້າພະເຈົ້າບໍ່ໄດ້ຮັບການຝຶກໃນການເວົ້າມາ, ແຕ່ຂ້າພະເຈົ້າກໍຍັງມີຄວາມຮູ້.
ເຊິ່ງຂ້າພະເຈົ້າໄດ້ສະແດງຂໍ້ນີ້ໃຫ້ທ່ານເຫັນໃນທຸກໆທາງ ແລະ ໃນສິ່ງທັງປວງເຫລົ່ານີ້.
7ຂ້າພະເຈົ້າໄດ້ເຮັດຜິດໃນການຖ່ອມໃຈຕົວເອງລົງເພື່ອທີ່ຈະຍົກຊູທ່ານຂຶ້ນບໍ?
ເພາະຂ້າພະເຈົ້າໄດ້ປະກາດຂ່າວປະເສີດຂອງພຣະເຈົ້າແກ່ພວກທ່ານແບບບໍ່ມີປະໂຫຍດ.
8ຂ້າພະເຈົ້າໄດ້ຍາດຊິງເອົາຄຣິສຕະຈັກອື່ນໆໂດຍການຮັບການຊ່ວຍເຫລືອຈາກພວກເຂົາເພື່ອບົວລະບັດທ່ານທັງຫລາຍ.
9ເມື່ອຂ້າພະເຈົ້າໄດ້ຢູ່ກັບພວກທ່ານ ແລະ ກຳລັງຂັດສົນຢູ່ນັ້ນ, ຂ້າພະເຈົ້າກໍບໍ່ໄດ້ເປັນພາລະສຳລັບໃຜ. ເພາະວ່າພີ່ນ້ອງທີ່ມາຈາກແຂວງ
ມາເກໂດເນຍ. ໄດ້ຊ່ວຍເຫລືອໃນຄວາມຂາດແຄນຂອງຂ້າພະເຈົ້າ ຂ້າພະເຈົ້າລະວັງຕົວທີ່ຈະບໍ່ໃຫ້ເປັນພາລະກັບພວກທ່ານໃນທຸກສິ່ງ, ແລະ ຂ້າ
ພະເຈົ້າຈະລະມັດລະວັງເຊັ່ນນີ້ຕໍ່ໄປ.
10ຄວາມຈິງຂອງພຣະຄຣິດຢູ່ໃນຂ້າພະເຈົ້າສັນໃດ, ຈຶ່ງບໍ່ມີຜູ້ໃດໃນແຂວງ ອະຂາຢາ ທີ່ຈະຫ້າມຂ້າພະເຈົ້າບໍ່ໃຫ້ສະແດງເລື່ອງນີ້ໄດ້ສັນນັ້ນ.
11ເພາະອັນໃດບໍ? ເພາະວ່າ ຂ້າພະເຈົ້າບໍ່ຮັກພວກທ່ານບໍ? ພຣະເຈົ້າຊົງຮູ້ຈັກ.
12ແຕ່ສິ່ງທີ່ຂ້າພະເຈົ້າກຳລັງເຮັດຢູ່ນັ້ນກໍຈະເຮັດຕໍ່ໄປ, ຂ້າພະເຈົ້າເຮັດເພື່ອຕັດໂອກາດຂອງຄົນເຫລົ່ານັ້ນທີ່ລໍຖ້າຫາໂອກາດ
ເພື່ອຈະອວດວ່າຕົວເອງກໍກຳລັງເຮັດວຽກຢ່າງດຽວກັນກັບພວກເຮົາ.13ເພາະວ່າຄົນດັ່ງກ່າວນັ້ນເປັນອັກຄະສາວົກປອມ ແລະ
ເປັນຄົນງານທີ່ຫລອກລວງ. ພວກເຂົາປອມຕົວເປັນອັກຄະສາວົກຂອງພຣະຄຣິດ.
14ແລະການເຮັດແບບນີ້ບໍ່ຫນ້າປະຫລາດໃຈເລີຍ, ເພາະວ່າ ຊາຕານເອງກໍສາມາດປອມຕົວເອງເປັນທູດສະຫວັນແຫ່ງຄວາມສະຫວ່າງໄດ້.
15ມັນຈຶ່ງບໍ່ແມ່ນເລື່ອງແປກທີ່ຄົນຮັບໃຊ້ຂອງຊາຕານຈະທຳທ່າວ່າເປັນຜູ້ຮັບໃຊ້ຂອງຄວາມຊອບທຳ.
ຈຸດຈົບຂອງພວກເຂົາຈະເປັນໄປຕາມການກະທຳຂອງພວກເຂົາເອງ.
16ຂ້າພະເຈົ້າຂໍກ່າວຄືນອີກຢ່າງຫນຶ່ງວ່າ: ຢ່າໃຫ້ໃຜຄິດວ່າຂ້າພະເຈົ້າເປັນຄົນໂງ່ຈ້າ. ແຕ່ຖ້າທ່ານຄິດຢ່າງນັ້ນ,
ກໍໃຫ້ຕ້ອນຮັບຂ້າພະເຈົ້າຢ່າງຄົນໂງ່ຈ້າເຖີດ ເພື່ອຂ້າພະເຈົ້າຈະໄດ້ອວດຕົວເອງແດ່.
17ການທີ່ຂ້າພະເຈົ້າໄດ້ເວົ້າກ່ຽວກັບຄວາມໂອ້ອວດນີ້ອົງພຣະຜູ້ເປັນເຈົ້າບໍ່ໄດ້ອະນຸຍາດໃຫ້ເວົ້າ, ແຕ່ຂ້າພະເຈົ້າເວົ້າຄືຄົນໂງ່ຈ້າ.
18ເພາະມີຫລາຍຄົນໂອ້ອວດຕາມເນື້ອຫນັງ, ຂ້າພະເຈົ້າກໍຈະອວດຄືກັນ.
19ເພາະວ່າການທີ່ພວກທ່ານອົດຟັງຄົນໂງ່ຈ້າ, ເວົ້າດ້ວຍຄວາມຍິນດີນັ້ນ ອາດເປັນຍ້ອນພວກທ່ານເປັນຄົນສະຫລາດບໍ!
20ເພາະທ່ານອົດທົນກັບບາງຄົນທີ່ພາພວກທ່ານໄປເປັນທາດ, ບາງຄົນພາພວກທ່ານໄປເປັນເຫຍື່ອ, ບາງຄົນທີ່ເອົາປຽບພວກທ່ານ,
ບາງຄົນທີ່ຍົກຕົວເອງເປັນໃຫຍ່, ຫລື ບາງຄົນທີ່ຕົບຫນ້າຂອງພວກທ່ານ.21ຂ້າພະເຈົ້າຂໍເວົ້າດ້ວຍຄວາມລະອາຍວ່າ
ພວກເຮົາອ່ອນແອເກີນໄປໃນເລື່ອງນີ້, ຖ້າມີໃຜກ້າອວດໃນເລື່ອງໃດກໍຕາມ-ຂ້າພະເຈົ້າເວົ້າຢ່າງຄົນໂງ່ຈ້າ-ຂ້າພະເຈົ້າກໍຈະອວດດວ້ຍຄືກັນ.
22ພວກເຂົາເປັນຊົນຊາດ ເຮັບເຣີບໍ? ຂ້າພະເຈົ້າກໍເປັນເຫມືອນກັນ. ພວກເຂົາເປັນຊົນຊາດ ອິດສະຣາເອນບໍ? ຂ້າພະເຈົ້າກໍເປັນເຫມືອນກັນ.
ພວກເຂົາເປັນເຊື້ອສາຍຂອງອັບຣາຮາມບໍ? ຂ້າພະເຈົ້າກໍເປັນເຫມືອນກັນ.23ພວກເຂົາເປັນຜູ້ຮັບໃຊ້ຂອງພຣະຄຣິດບໍ?
ຂ້າພະເຈົ້າກໍເປັນຫລາຍກວ່າພວກເຂົາເສີຍອີກ. (ຂ້າພະເຈົ້າເວົ້າຄືກັບຄົນເສຍສະຕິ.) ຂ້າພະເຈົ້າເຮັດວຽກຫນັກກວ່າພວກເຂົາ,
ຂ້າພະເຈົ້າຖືກຈຳຄຸກຫລາຍກ່ວາພວກເຂົາ, ຂ້າພະເຈົ້າຖືກທຸບຕີເກີນຂະຫນາດ,
ຂ້າພະເຈົ້າໄດ້ປະເຊີນກັບໄພອັນຕະລາຍເກືອບເຖິງຕາຍຢູ່ເລື້ອຍໆ.
24ພວກຢິວໄດ້ຂ້ຽນຕີຂ້າພະເຈົ້າຫ້າເທື່ອ "ເທື່ອລະສາມສິບເກົ້າບາດ."25ເຂົາຕີຂ້າພະເຈົ້າດ້ວຍໄມ້ແສ້ຫວາຍສາມເທື່ອ.
ພວກເຂົາໄດ້ແກວ່ງກ້ອນຫີນໃສ່ຂ້າພະເຈົ້າຫນຶ່ງເທື່ອ. ຂ້າພະເຈົ້າປະເຊີນກັບເຮືອຫລົ້ມສາມເທື່ອ. ຂ້າພະເຈົ້າລອຍຢູ່ໃນທະເລເປັນເວລາຫນຶ່ງຄືນ
ແລະ ຫນຶ່ງມື້.26ຂ້າພະເຈົ້າຕ້ອງເດີນທາງເລື້ອຍໆ, ເຊິ່ງຕ້ອງປະເຊີນກັບໄພອັນຕະລາຍຈາກແມ່ນ້ຳ, ແລະຈາກໂຈນຮ້າຍ,
ປະເຊີນກັບໄພອັນຕະລາຍຈາກຄົນຊາດດຽວກັນກັບຂ້າພະເຈົ້າເອງ, ອັນຕະລາຍຈາກຄົນຕ່າງຊາດ, ປະເຊີນຕໍ່ອັນຕະລາຍໃນຕົວເມືອງ,
ປະເຊີນໄພອັນຕະລາຍໃນຖິ່ນແຫ້ງແລ້ງກັນດານ, ປະເຊີນໄພອັນຕະລາຍໃນທະເລ, ປະເຊີນໄພອັນຕະລາຍຈາກພີ່ນ້ອງຫລອກຫລວງ.
27ຂ້າພະເຈົ້າຕ້ອງເຮັດວຽກຢ່າງຫນັກຫນ່ວງ ແລະ ລຳບາກ, ຕ້ອງອົດຫລັບອົດນອນ, ຕ້ອງອຶດເຂົ້າ ຢາກນ້ຳ ແລະ
ຫລາຍເທື່ອຂາດອາຫານການກິນ, ຕ້ອງທົນຫນາວ ແລະ ເປືອຍກາຍ.28ນອກຈາກນີ້ແລ້ວ ຍັງມີສິ່ງອື່ນໆ, ທີ່ກົດດັນຂ້າພະເຈົ້າຢູ່ທຸກໆວັນ
ຄືຄວາມກັງວົນໃຈກ່ຽວກັບຄຣິສຕະຈັກໃນທຸກແຫ່ງ29ມີຜູ້ໃດທີ່ອ່ອນກຳລັງ ແລະ ຂ້າພະເຈົ້າບໍ່ອ່ອນກຳລັງດ້ວຍ? ມີຜູ້ໃດທີ່ຖືກເຮັດໃຫ້ສະດຸດ,
ແລະ ຂ້າພະເຈົ້າບໍ່ເປັນທຸກເປັນຮ້ອນດ້ວຍ?
30ຖ້າຂ້າພະເຈົ້າຈຳເປັນຕ້ອງອວດ, ຂ້າພະເຈົ້າຈະອວດໃນສິ່ງທີ່ສະແດງເຖິງຄວາມອ່ອນແອຂອງຂ້າພະເຈົ້າ.31ພຣະເຈົ້າ ແລະ
ພຣະບິດາເຈົ້າຂອງອົງພຣະເຢຊູຄຣິດເຈົ້າ, ຜູ້ຊຶ່ງໄດ້ຮັບຄຳສັນລະເສີນເປັນນິດນັ້ນ, ຊົງຮູ້ວ່າຂ້າພະເຈົ້າບໍ່ໄດ້ຕົວະ!
32ຜູ້ວ່າຣາຊການເມືອງຂອງກະສັດ ອາເຣຕາ ໃນນະຄອນ ດາມັສກັດ ໃຫ້ຄົນເຝົ້າຍາມນະຄອນ ດາມັສກັດ ໄວ້ເພື່ອຈະຈັບຂ້າພະເຈົ້າ.
33ແຕ່ຂ້າພະເຈົ້າຖືກເອົາໃສ່ໃນກະບຸງໃຫຍ່ຢ່ອນລົງທາງປ່ອງຢ້ຽມຂອງກຳແພງນະຄອນນັ້ນ,
ຂ້າພະເຈົ້າຈຶ່ງໄດ້ຫນີພົ້ນຈາກເງື້ອມມືຂອງທ່ານເຈົ້າເມືອງນັ້ນ.

12 [1]ຂ້າພະເຈົ້າຈຳເປັນຕ້ອງອວດ, ເຖິງແມ່ນຈະບໍ່ໄດ້ຮັບປະໂຫຍດອັນໃດ, ແຕ່ຂ້າພະເຈົ້າຈະສືບຕໍ່ບອກກ່ຽວກັບນິມິດ ແລະ
ການສຳແດງຕ່າງໆທີ່ມາຈາກອົງພຣະຜູ້ເປັນເຈົ້າ. [2]ເມື່ອສິບສີ່ປີກ່ອນ ຂ້າພະເຈົ້າຮູ້ຈັກຊາຍຄົນຫນຶ່ງໃນພຣະຄຣິດ
ຊຶ່ງລາວຖືກຮັບຂຶ້ນສູ່ສະຫວັນຊັ້ນທີສາມ ເຖິງວ່າ ຈະໄປທັງຮ່າງກາຍ ຫລື ບໍ່ມີຮ່າງກາຍ, ຂ້າພະເຈົ້າກໍບໍ່ຮູ້, ພຣະເຈົ້າເທົ່ານັ້ນເປັນຜູ້ຊົງຮູ້ຈັກ.

[3]ແລະ ຂ້າພະເຈົ້າຮູ້ຈັກຄົນນັ້ນໄດ້ຮັບຂຶ້ນໄປ ຈະໄປທັງຮ່າງກາຍ ຫລື ບໍ່ມີຮ່າງກາຍ, ຂ້າພະເຈົ້າບໍ່ຮູ້,
ພຣະເຈົ້າເທົ່ານັ້ນຊົງຮູ້- [4]ຖືກຮັບຂຶ້ນໄປເຖິງບ່ອນສຸກຂະເສີມ ແລະ ໄດ້ຍິນສິ່ງຕ່າງໆທີ່ສັກສິດເກີນກວ່າທຸກຄົນທີ່ຈະເວົ້າໄດ້.
[5]ສຳລັບຊາຍຄົນນີ້ຂ້າພະເຈົ້າອວດໄດ້. ແຕ່ສຳລັບຂ້າພະເຈົ້າເອງນັ້ນ ຂ້າພະເຈົ້າຈະບໍ່ອວດ,
ເວັ້ນເສັຍແຕ່ວ່າຈະອວດເຖິງຄວາມອ່ອນແອຂອງຂ້າພະເຈົ້າ.
[6]ເພາະເຖິງແມ່ນວ່າຂ້າພະເຈົ້າຢາກຈະອວດ, ຂ້າພະເຈົ້າບໍ່ແມ່ນຄົນໂງ່ຈ້າ, ເພາະວ່າຂ້າພະເຈົ້າຈະເວົ້າຄວາມຈິງ. ແຕ່ຂ້າພະເຈົ້າຈະບໍ່ອວດ,
ເພື່ອຈະບໍ່ມີໃຜປະເມີນຂ້າພະເຈົ້າສູງກວ່າສິ່ງທີ່ລາວໄດ້ເຫັນໃນຂ້າພະເຈົ້າ ຫລື ໄດ້ຍິນຈາກຂ້າພະເຈົ້າ. [7]ແລະ ຂ້າພະເຈົ້າຈະບໍ່ອວດ
ເນື່ອງຈາກການທີ່ໄດ້ເຫັນການສຳແດງພິເສດຫລາຍຢ່າງ. ດ້ວຍເຫດນີ້, ເພື່ອບໍ່ໃຫ້ຂ້າພະເຈົ້າຍົກຕົວຂຶ້ນ,
ຈຶ່ງເຮັດໃຫ້ມີສ້ຽນຫນາມໃນເນື້ອຫນັງຂອງຂ້າພະເຈົ້າ, ເຊິ່ງແມ່ນທູດຂອງຊາຕານທີ່ໄດ້ທຸບຕີຂ້າພະເຈົ້າ,
ເພື່ອວ່າຂ້າພະເຈົ້າຈະບໍ່ໄດ້ເປັນຄົນທະເຍີທະຍານເກີນໄປ.
[8]ຂ້າພະເຈົ້າໄດ້ອະທິຖານເລື່ອງສ້ຽນຫນາມນັ້ນຕໍ່ພຣະຜູ້ເປັນເຈົ້າເຖິງສາມເທື່ອ, ເພື່ອໃຫ້ຊົງເອົາອອກໄປຈາກຂ້າພະເຈົ້າ. [9]ແລະ
ພຣະອົງຊົງໄດ້ກ່າວກັບຂ້າພະເຈົ້າວ່າ, "ພຣະຄຸນຂອງເຮົາກໍມີພຽງພໍສຳລັບເຈົ້າ, ເພາະວ່າຄວາມອ່ອນແອມີຢູ່ໃສ
ຣິດເດດຂອງເຮົາກໍມີຢ່າງເຕັມຂະຫນາດຢູ່ທີ່ນັ້ນ." ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂໍອວດໃນເລື່ອງຄວາມອ່ອນແອຂອງຂ້າພະເຈົ້າ
ເພື່ອຣິດອຳນາດຂອງພຣະຄຣິດທີ່ຈະໄດ້ຢູ່ໃນຂ້າພະເຈົ້າ. [10]ເຫດສະນັ້ນ ເພາະເຫັນແກ່ພຣະຄຣິດ
ຂ້າພະເຈົ້າຈຶ່ງຊື່ນໃຈໃນຄວາມອ່ອນແອຂອງຂ້າພະເຈົ້າ, ໃນການດູຫມິ່ນ, ໃນການທຸກຍາກຕ່າງໆ, ໃນການຖືກຂົ່ມເຫັງ, ໃນຄວາມຍາກລຳບາກ.
ເພື່ອວ່າຂ້າພະເຈົ້າອ່ອນແອເມື່ອໃດ, ຂ້າພະເຈົ້າກໍຈະເຂັ້ມແຂງຂຶ້ນເມື່ອນັ້ນ.
[11]ຂ້າພະເຈົ້າກາຍເປັນຄົນໂງ່ຈ້າໄປແລ້ວ! ທ່ານບັງຄັບຂ້າພະເຈົ້າໃຫ້ເປັນ, ເພາະວ່າຂ້າພະເຈົ້າສົມຄວນທີ່ຈະໄດ້ຮັບການຍົກຍ້ອງຈາກພວກທ່ານ.
ເພາະວ່າຂ້າພະເຈົ້າກໍບໍ່ຕ່ຳກວ່າບັນດາອັກຄະສາວົກພິເສດເຫລົ່ານັ້ນ, ເຖິງແມ່ນວ່າຂ້າພະເຈົ້າຈະບໍ່ໄດ້ເປັນຄົນພິເສດອັນໃດເລີຍ.
[12]ລັກສະນະທີ່ແທ້ຈິງຕ່າງໆ ຂອງການເປັນອັກຄະສາວົກນັ້ນ ກໍໄດ້ກາຍເປັນທີ່ແຈ່ມແຈ້ງໃນບັນດາພວກທ່ານ,
ດ້ວຍຄວາມອົດທົນໂດຍຫມາຍສຳຄັນ ແລະ ການອັດສະຈັນ ລວມທັງໂດຍການອິດທິຣິດຕ່າງໆ.
[13]ເພາະວ່າພວກທ່ານດ້ວຍຄວາມສຳຄັນໄປກວ່າຄຣິສຕະຈັກອື່ນໆຢ່າງໃດບໍ?, ນອກຈາກການທີ່ຂ້າພະເຈົ້າບໍ່ໄດ້ເປັນພາລະແກ່ພວກທ່ານ?
ການຜິດໃນຂໍ້ນີ້ຂໍພວກທ່ານໃຫ້ອະໄພແກ່ຂ້າພະເຈົ້າດ້ວຍເຖີດ!
[14]ນີ້ແຫລະ ຂ້າພະເຈົ້າພ້ອມທີ່ຈະມາພົບກັບພວກທ່ານເປັນເທື່ອທີສາມ. ຂ້າພະເຈົ້າຈະບໍ່ເປັນພາລະຕໍ່ພວກທ່ານ,
ເພາະວ່າຂ້າພະເຈົ້າບໍ່ຕ້ອງການສິ່ງໃດໆຂອງພວກທ່ານທັງຫລາຍເລີຍ, ແຕ່ຂ້າພະເຈົ້າຕ້ອງການພວກທ່ານ.
ເພາະວ່າເປັນການບໍ່ສົມຄວນທີ່ລູກໆຈະສະສົມໄວ້ສຳລັບພໍ່ແມ່. ແຕ່, ພໍ່ແມ່ຕ່າງຫາກທີ່ຄວນຈະສະສົມໄວ້ສຳລັບລູກ.
[15]ຂ້າພະເຈົ້າມີຄວາມຍິນດີຫລາຍໃນການເສັຍສະຫລະ ແລະ ການເສັຍສະຫລະນີ້ ກໍເພື່ອຈິດວິນຍານຂອງພວກທ່ານ.
ແມ່ນວ່າຂ້າພະເຈົ້າຮັກພວກທ່ານຫລາຍຂຶ້ນ, ແຕ່ທ່ານພັດຮັກຂ້າພະເຈົ້າຫນ້ອຍລົງ
[16]ແຕ່ເຖິງແມ່ນວ່າຈະເປັນເຊັ່ນນັ້ນ, ຂ້າພະເຈົ້າກໍຈະບໍ່ເປັນພາລະຕໍ່ທ່ານທັງຫລາຍ. ແຕ່, ພວກທ່ານກໍເວົ້າວ່າຂ້າພະເຈົ້າເປັນຄົນເລ້ຫລ່ຽມ
ຂ້າພະເຈົ້າຫຼອກລວງເອົາປຽບທ່ານທັງຫລາຍ. [17]ຂ້າພະເຈົ້າເອົາປຽບພວກທ່ານໂດຍການສົ່ງຜູ້ໃດຜູ້ຫນຶ່ງໄປຫາພວກທ່ານບໍ?
[18]ຂ້າພະເຈົ້າໄດ້ຂໍຮ້ອງໃຫ້ ຕີໂຕ ໄປຫາທ່ານ, ແລະ ສົ່ງພີ່ນ້ອງອີກຄົນຫນຶ່ງໄປນຳລາວ. ຕີໂຕ ເອົາປຽບພວກທ່ານບໍ?
ພວກເຮົາບໍ່ໄດ້ເດີນໃນທາງດຽວກັນບໍ? ພວກເຮົາບໍ່ໄດ້ກ້າວເດີນຕາມເສັ້ນທາງດຽວກັນບໍ?
[19]ທ່ານທັງຫລາຍຄິດຢູ່ຕະຫລອດມາວ່າ ພວກເຮົາແກ້ຕົວໃຫ້ພວກເຮົາເອງຕໍ່ພວກທ່ານບໍ? ຂ້າພະເຈົ້າເວົ້າໃນພຣະຄຣິດ ດັ່ງວ່າ
ຂ້າພະເຈົ້າຢູ່ຊ້ອງຫນ້າຂອງພຣະເຈົ້າ ວ່າສິ່ງສາລະພັດທີ່ເຮັດນັ້ນ ກໍເພື່ອຄວາມຈະເລີນຂອງພວກທ່ານ.
[20]ເພາະວ່າຂ້າພະເຈົ້າຢ້ານວ່າເມື່ອມາຮອດ ຂ້າພະເຈົ້າອາດຈະບໍ່ໄດ້ເຫັນພວກທ່ານໃນສິ່ງທີ່ຂ້າພະເຈົ້າຢາກເຫັນ.
ຂ້າພະເຈົ້າຢ້ານວ່າທ່ານຈະບໍ່ໄດ້ພົບກັບຂ້າພະເຈົ້າຕາມທີ່ພວກທ່ານປາຖະຫນາ. ຂ້າພະເຈົ້າຢ້ານວ່າ ຈະມີການໂຕ້ຖຽງກັນ, ມີການອິດສາກັນ,
ໄດ້ມີການຄຽດແຄ້ນໃສ່ກັນ, ມີການເຫັນແກ່ຕົວ, ມີການນິນທາກັນ, ມີຄວາມຈອງຫອງກັນ, ແລະມີຄວາມວຸ່ນວາຍ. [21]ຂ້າພະເຈົ້າຢ້ານວ່າ
ເມື່ອຂ້າພະເຈົ້າມາເຖິງ ພຣະເຈົ້າຈະເຮັດໃຫ້ຂ້າພະເຈົ້າຕ້ອງອັບອາຍຕໍ່ຫນ້າພວກທ່ານ. ຂ້າພະເຈົ້າຢ້ານວ່າ ຂ້າພະເຈົ້າຈະເສັຍໃຈ
ເນື່ອງດ້ວຍຄວາມບາບທັງຫລາຍ ທີ່ບາງຄົນໄດ້ເຮັດມາກ່ອນຫນ້ານີ້, ແລະ ຄົນທີ່ບໍ່ກັບໃຈຈາກມົນທິນ ແລະ ຈາກການຫລິ້ນຊູ້ ແລະ
ຈາກຕັນຫາທີ່ພວກເຂົາເຮັດຢູ່ນັ້ນ.

 generated on Tue Jun 17 19:01:42 2025

13 1ເທື່ອນີ້ ຈະເປັນເທື່ອທີສາມທີ່ຂ້າພະເຈົ້າໄດ້ມາຢ້ຽມຢາມພວກທ່ານ. "ຂໍ້ກ່າວຫາໃດໆຈະຕ້ອງມີພະຍານສອງ ຫລື
ສາມຄົນຈຶ່ງຈະເຊື່ອຖືໄດ້."2ຂ້າພະເຈົ້າເຄີຍກ່າວໄວ້ໃນຄັ້ງທີສອງແລ້ວກັບຄົນເຫລົ່ານັ້ນ ທີ່ໄດ້ເຮັດບາບກ່ອນຫນ້ານັ້ນ ແລະ
ພວກທີ່ເຫລືອທັງຫມົດ, ແລະ ຂ້າພະເຈົ້າຂໍກ່າວອີກເທື່ອຫນຶ່ງວ່າ: ເມື່ອຂ້າພະເຈົ້າກັບມາອີກ,
ຂ້າພະເຈົ້າຈະບໍ່ລະເວັ້ນການລົງໂທດຄົນເຫລົ່ານີ້ເລີຍ.

3ຂ້າພະເຈົ້າບອກສິ່ງນີ້ແກ່ພວກທ່ານ ເພາະວ່າພວກທ່ານ ກຳລັງຊອກຫາຫລັກຖານວ່າ ທີ່ພຣະຄຣິດໄດ້ກ່າວຜ່ານທາງຂ້າພະເຈົ້າ.
ພຣະອົງບໍ່ໄດ້ອ່ອນກຳລັງຕໍ່ທ່ານ. ແຕ່, ມີພະລັງຫລາຍໃນພວກທ່ານ.4ເຖິງແມ່ນວ່າ ພຣະອົງຈະຖືກຄຶງເພາະວ່າຄວາມອ່ອນກຳລັງ,
ແຕ່ພຣະອົງຍັງຊົງມີພຣະຊົນຢູ່ໂດຍຣິດອຳນາດຂອງພຣະເຈົ້າ. ແລະ ເຖິງແມ່ນວ່າຂ້າພະເຈົ້າອ່ອນກຳລັງດ້ວຍເຊັ່ນດຽວກັນ,
ແຕ່ຂ້າພະເຈົ້າຈະຍັງມີຊີວິດຢູ່ໂດຍຣິດອຳນາດຂອງພຣະເຈົ້າ ຊຶ່ງຢູ່ໃນທ່າມກາງພວກທ່ານ.
5ທ່ານພິຈາລະນາຕົວຂອງທ່ານເບິ່ງວ່າທ່ານຕັ້ງຢູ່ໃນຄວາມເຊື່ອຫລືບໍ່? ທ່ານຈົ່ງພິສູດຕົວທ່ານເອງເຖີດ
ພວກທ່ານບໍ່ຮູ້ບໍ່ວ່າພຣະເຢຊູຄຣິດເຈົ້າຊົງສະຖິດໃນພວກທ່ານ? ພຣະອົງສະຖິດຢູ່ແນ່ນອນ ນອກຈາກວ່າພວກທ່ານຈະບໍ່ຜ່ານການພິສູດ.6ແລະ
ຂ້າພະເຈົ້າມີຄວາມເຊື່ອຫມັ້ນວ່າ ພວກທ່ານຈະພົບວ່າ ພວກເຮົາບໍ່ຜ່ານການພິສູດນັ້ນ.
7ບັດນີ້ ພວກເຮົາຂໍອະທິຖານຕໍ່ພຣະເຈົ້າ ເພື່ອທີ່ຈະບໍ່ໃຫ້ພວກທ່ານກະທຳຜິດໃດໆ. ຂ້າພະເຈົ້າບໍ່ໄດ້ອະທິຖານເພື່ອໃຫ້ພວກເຮົາປະກົດວ່າ
ຜ່ານການພິສູດ. ແຕ່, ຂ້າພະເຈົ້າອະທິຖານເພື່ອໃຫ້ພວກທ່ານເຮັດໃນສິ່ງທີ່ຖືກຕ້ອງ,
ເຖິງແມ່ນວ່າພວກເຮົາເອງເບິ່ງຄືວ່າພວກເຮົາໄດ້ພ່າຍແພ້ໃນການພິສູດນັ້ນ.8ເພາະວ່າພວກເຮົາບໍ່ສາມາດເຮັດສິ່ງໃດໆ ທີ່ຂັດກັບຄວາມຈິງໄດ້,
ແຕ່ເຮັດເພື່ອຄວາມຈິງເທົ່ານັ້ນ.
9ເພາະວ່າຂ້າພະເຈົ້າມີຄວາມຊື່ນຊົມຍິນດີໃນຍາມທີ່ຂ້າພເະເຈົ້າອ່ອນແອ ແລະ ພວກທ່ານມີຄວາມເຂັ້ມແຂງ.
ເຮົາອະທິຖານຢ່າງນີ້ດ້ວຍເຊັ່ນກັນຄືຂໍໃຫ້ທ່ານທັງຫລາຍໄດ້ເປັນຄົນທີ່ສົມບູນພ້ອມ.
10ຂ້າພະເຈົ້າໄດ້ຂຽນສິ່ງເຫລົ່ານີ້ໃນຂະນະທີ່ຂ້າພະເຈົ້າຢູ່ຫ່າງຈາກພວກທ່ານ, ດ້ວຍວ່າເມື່ອຂ້າພະເຈົ້າມາແລ້ວ
ຈະບໍ່ຈຳເປັນຕ້ອງເຂັ້ມງວດພວກທ່ານໂດຍການໃຊ້ອຳນາດ ຊຶ່ງອົງພຣະຜູ້ເປັນເຈົ້າປະທານແກ່ຂ້າພະເຈົ້າ, ເພື່ອທີ່ຈະເສີມສ້າງທ່ານຂຶ້ນ,
ບໍ່ແມ່ນທຳລາຍລົງ.
11ສຸດທ້າຍນີ້, ພີ່ນ້ອງທັງຫລາຍ, ຈົ່ງຊື່ນຊົມຍິນດີ! ຈົ່ງເຮັດເພື່ອໃຫ້ເກີດຄວາມປອງດອງກັນ, ຈົ່ງຫນູນໃຈກັນ, ຈົ່ງເປັນນ້ຳຫນຶ່ງໃຈດຽວກັນ,
ຈົ່ງຢູ່ຮ່ວມກັນດ້ວຍສັນຕິສຸກ. ແລະຂໍໃຫ້ພຣະເຈົ້າແຫ່ງຄວາມຮັກ ແລະ ສັນຕິສຸກຊົງສະຖິດກັບພວກທ່ານ.12ຈົ່ງກ່າວທັກທາຍຕໍ່ກັນ ແລະ ກັນ
ດ້ວຍປະເພນີການຈູບອັນບໍຣິສຸດ.
13ໄພ່ພົນທັງປວງຂອງພຣະເຈົ້າ ຝາກຄວາມຄິດຮອດມາເຖິງທ່ານທັງຫລາຍ.14ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າ, ຄວາມຮັກຂອງພຣະເຈົ້າ,
ແລະ ຄວາມສາມັກຄີທຳກັບພຣະວິນຍານບໍຣິສຸດເຈົ້າ ຈົ່ງດຳຣົງຢູ່ກັບພວກທ່ານທັງຫລາຍເຖີດ.

# ຄາລາເຕຍ

1 1ຂ້າພະເຈົ້າ ໂປໂລ, ຜູ້ເປັນອັກຄະສາວົກ - ຂ້າພະເຈົ້າບໍ່ໄດ້ຮັບການແຕ່ງຕັ້ງເປັນ ອັກຄະສາວົກ ຈາກມະນຸດຄົນໃດ ຫລື
ຕົວແທນຂອງມະນຸດຄົນໃດ, ແຕ່ວ່າພຣະເຢຊູຄຣິດເຈົ້າ ພຣະບິດາເຈົ້າ, ຜູ້ຊົງບັນດານໃຫ້ພຣະເຢຊູຄືນຈາກຄວາມຕາຍໄດ້ ຊົງແຕ່ງຕັ້ງ.2ແລະ
ບັນດາພີ່ນ້ອງທັງຫມົດທີ່ຢູ່ນຳເຮົາ, ເຖິງຄຣິສຕະຈັກທັງຫລາຍຢູ່ໃນແຄ້ວນ ຄາລາເຕຍ:

3ຂໍໃຫ້ພຣະຄຸນ ແລະ ສັນຕິສຸກຊຶ່ງມາຈາກພຣະເຈົ້າ ພຣະບິດາເຈົ້າ ແລະ ພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ນຳເຈົ້າທັງຫລາຍເທີ້ນ,
4ຜູ້ຊົງສະຫລະພຣະອົງເພາະບາບຂອງພວກເຮົາ ເພື່ອໂຜດພວກເຮົາໃຫ້ພົ້ນຈາກຍຸກອັນຊົ່ວຊ້າ ໃນປະຈຸບັນ, ນີ້ຕາມພຣະປະສົງຂອງພຣະເຈົ້າ
ແລະ ພຣະບິດາຂອງເຮົາ.5ຂໍຖວາຍກຽດຕິຍົດ ແດ່ພຣະອົງນັ້ນສືບໆໄປເປັນນິດ. ອາແມນ.
6ຂ້າພະເຈົ້າຮູ້ສຶກປະຫລາດໃຈຢ່າງຫລາຍ ທີ່ທ່ານທັງຫລາຍພາກັນປະຖິ້ມພຣະອົງຢ່າງຮີບດ່ວນ ພຣະອົງຊົງເອີ້ນພວກທ່ານມາ
ດ້ວຍພຣະຄຸນຂອງພຣະຄຣິດເຈົ້າ. ແລະ ຂ້າພະເຈົ້າຮູ້ສຶກປະຫລາດໃຈທີ່ທ່ານຕ່າວຄືນໄປຫາຂ່າວອື່ນໆຢ່າງໄວວາ.
7ບໍ່ມີຂ່າວປະເສີດຢ່າງອື່ນອີກ, ແຕ່ມີບາງຄົນໄດ້ເຮັດໃຫ້ ພວກເຈົ້າວຸ້ນວາຍໃຈ ແລະ ຢາກຫາທາງປ່ຽນແປງຂ່າວປະເສີດ ເລື່ອງພຣະຄຣິດເຈົ້າ.
8ແຕ່ເຖິງແມ່ນວ່າພວກເຮົາ ຫລື ເທວະດາຈາກສະຫວັນກໍຕາມຈະປະກາດຂ່າວປະເສີດອື່ນ
ແກ່ພວກເຮົາທີ່ບໍ່ຕົງກັບທີ່ພວກເຮົາໄດ້ປະກາດແກ່ພວກເຈົ້າແລ້ວນັ້ນ, ກໍໃຫ້ຜູ້ນັ້ນຖືກສາບແຊ່ງ.9ເຫມືອນດັ່ງພວກເຮົາໄດ້ກ່າວກ່ອນແລ້ວ, ແລະ
ບັດນີ້ ເຮົາຂໍກ່າວຢ້ຳອີກວ່າ "ຖ້າຜູ້ໃດ ປະກາດຂ່າວປະເສີດ ແກ່ພວກເຈົ້າທີ່ແຕກຕ່າງໄປ ຈາກທີ່ພວກເຈົ້າໄດ້ຮັບໄວ້ແລ້ວນັ້ນ,
ກໍໃຫ້ຜູ້ນັ້ນຖືກສາບແຊ່ງ".10ເຮົາສະແຫວງຫາທີ່ຈະໄດ້ຮັບການຍອມຮັບຈາກມະນຸດ ຫລື ຈາກພຣະເຈົ້າ?
ຂ້າພະເຈົ້າກຳລັງພະຍາຍາມເຮັດໃຫ້ຖືກໃຈມະນຸດບໍ? ຖ້າເຮັດເຊັ່ນນີ້, ຂ້າພະເຈົ້າກໍບໍ່ແມ່ນຜູ້ຮັບໃຊ້ຂອງພຣະຄຣິດເຈົ້າ.
11ພີ່ນ້ອງທັງຫລາຍເອີຍ, ຂ້າພະເຈົ້າຢາກບອກໃຫ້ພວກເຈົ້າ ຮູ້ວ່າຂ່າວປະເສີດ,
ທີ່ຂ້າພະເຈົ້າໄດ້ປະກາດແກ່ເຈົ້າທັງຫລາຍນັ້ນບໍ່ແມ່ນມາຈາກມະນຸດ.12ດ້ວຍວ່າ, ຂ້າພະເຈົ້າ ບໍ່ໄດ້ຮັບຈາກມະນຸດ ຫລື
ບໍ່ມີມະນຸດຄົນໃດສອນຂ້າພະເຈົ້າ, ແຕ່ເປັນການທີ່ພຣະເຢຊູຄຣິດເຈົ້າ ຊົງເປີດເຜີຍແກ່ຂ້າພະເຈົ້າ.
13ພວກເຈົ້າທັງຫລາຍ ໄດ້ຍິນເຖິງຊີວິດເບື້ອງຫລັງຂອງຂ້າພະເຈົ້າ, ເມື່ອຍັງຢູ່ໃນລັດທິຢິວນັ້ນ, ຂ້າພະເຈົ້າ ໄດ້ຂົ່ມເຫັງຄຣິສຕະຈັກ ຂອງພຣະເຈົ້າ
ຢ່າງຮ້າຍແຮງເຫລືອເກີນ ແລະ ໄດ້ພະຍາຍາມທຳລາຍ.14ຂ້າພະເຈົ້າກໍລ້ຳຫນ້າ ກວ່າເພື່ອນຮ່ວມຊາດຫລາຍຄົນ
ໃນດ້ານສາດສະຫນາຂອງຊາວຢິວ ທີ່ຢູ່ຮ່ວມສະໄຫມກັບຂ້າພະເຈົ້າ. ຂ້າພະເຈົ້າກະຕືລືລົ້ນຫລາຍ
ໃນການປະຕິບັດປະເພນີຂອງບັນພະບຸລຸດຂອງຂ້າພະເຈົ້າ.
15ແຕ່ເມື່ອພຣະເຈົ້າ, ຜູ້ຊົງເລືອກຂ້າພະເຈົ້າຕັ້ງແຕ່ຢູ່ໃນທ້ອງແມ່, ຜູ້ຊົງເອີ້ນຂ້າພະເຈົ້າ ໂດຍພຣະຄຸນຂອງພຣະອົງ.16ຊົງພໍພຣະໄທທີ່ຊົງສຳແດງ
ພຣະບຸດ ຂອງພຣະອົງ ໃນຂ້າພະເຈົ້າ, ເພື່ອໃຫ້ຂ້າພະເຈົ້າໄດ້ປະກາດຂ່າວປະເສີດ ເລື່ອງພຣະບຸດນັ້ນ ໃນທ່າມກາງພວກຕ່າງຊາດ, ຂ້າພະເຈົ້າ


generated on Tue Jun 17 19:01:42 2025

ບໍ່ໄດ້ປຶກສາກັບກັບມະນຸດຄົນໃດໃນທັນທີ.[17]ຂ້າພະເຈົ້າ ບໍ່ໄດ້ຂຶ້ນໄປຍັງນະຄອນເຢຣູຊາເລັມ ເຮົາກໍຍັງບໍ່ໄດ້
ໄປຫາຜູ້ເປັນອັກຄະສາວົກກ່ອນຂ້າພະເຈົ້າ, ແຕ່ຂ້າພະເຈົ້າ, ກັບອອກໄປຍັງປະເທດ ອາຣາເບຍ ແລ້ວກັບມາເມືອງ ດາມັສກັດອີກ.
[18]ຫລັງຈາກນັ້ນສາມປີ ຂ້າພະເຈົ້າຂຶ້ນໄປທີ່ນະຄອນເຢຣູຊາເລັມ ເພື່ອທຳຄວາມລຶ້ງເຄີຍກັບ ເຄຟາສ ແລະ
ຂ້າພະເຈົ້າໄດ້ພັກຢູ່ກັບເພິ່ນເປັນເວລາສິບຫ້າວັນ.[19]ແຕ່ຂ້າພະເຈົ້າ ບໍ່ໄດ້ພົບກັບ ອັກຄະສາວົກຄົນອື່ນເລີຍ ນອກຈາກ ຢາໂກໂບ,
ຜູ້ທີ່ເປັນນ້ອງຊາຍຂອງ ອົງພຣະຜູ້ເປັນເຈົ້າ.[20]ໃນສິ່ງທີ່ຂ້າພະເຈົ້າຂຽນເຖິງທ່ານ, ຂ້າພະເຈົ້າຮັບຮອງ ຕໍ່ຫນ້າອົງພຣະຜູ້ເປັນເຈົ້າ,
ບໍ່ໄດ້ຂຽນເລື່ອງຂີ້ຕົວະ.
[21]ແລ້ວຂ້າພະເຈົ້າ ກໍໄປໃນເຂດແດນ ຊີເຣຍ ແລະ ກີລີເກຍ.[22]ຂ້າພະເຈົ້າຍັງບໍ່ໄດ້ເປັນທີ່ຮູ້ຈັກ ໃນຄຣິສຕະຈັກ ແຂວງຢູດາຍ
ຊຶ່ງຢູ່ໃນພຣະຄຣິດເຈົ້າ.[23]ພວກເຂົາພຽງແຕ່ໄດ້ຍິນວ່າ, “ຜູ້ທີ່ແຕ່ກ່ອນເຄີຍໄດ້ກົດຂີ່ຂົ່ມເຫັງ ພວກເຮົາ ບັດນີ້ໄດ້ມາ ປະກາດຂ່າວປະເສີດ
ເລື່ອງຂອງຄວາມເຊື່ອ ຊຶ່ງເຂົາໄດ້ເຄີຍພະຍາຍາມທຳລາຍ.”[24]ພວກເຂົາໄດ້ສັນລະເສີນ ພຣະເຈົ້າ ກໍເພາະດ້ວຍເລື່ອງຂອງຂ້າພະເຈົ້າ.

 generated on Tue Jun 17 19:01:42 2025

2 [1]ຫລັງຈາກນັ້ນສິບສີ່ປີ ຂ້າພະເຈົ້າໄດ້ກັບຄືນໄປທີ່ນະຄອນເຢຣູຊາເລັມກັບ ບາຣະນາບາ, ແລະ ເຮົາກໍໄດ້ເອົາ ຕີໂຕ ໄປດ້ວຍ.
[2]ຂ້າພະເຈົ້າໄດ້ໄປຕາມການຊົງເປີດເຜີຍ ແລະ ຂ້າພະເຈົ້າໄດ້ເລົ່າເລື່ອງຂ່າວປະເສີດແກ່ພວກເຂົາ. ຊຶ່ງຂ້າພະເຈົ້າ
ປະກາດໃນທ່າມກາງຄົນຕ່າງຊາດໃຫ້ເຂົາຟັງ. ຂ້າພະເຈົ້າເລົ່າໃຫ້ຄົນທີ່ເບິ່ງ ເຫມືອນເປັນຜູ້ທີ່ສຳຄັນຟັງ ເປັນການສ່ວນຕົວ, ເພື່ອໃຫ້ຫມັ້ນໃຈວ່າ
ຂ້າພະເຈົ້າບໍ່ໄດ້ກຳລັງແລ່ນແຂ່ງ ຫລື ໄດ້ແລ່ນແຂ່ງແລ້ວ - ໂດຍບໍ່ມີປະໂຫຍດ.

[3]ແຕ່ເຖິງແມ່ນວ່າ ຕີໂຕ, ຜູ້ຢູ່ກັບຂ້າພະເຈົ້າ ແລະ ເປັນຄົນກຣີກ ແຕ່ເຂົາກໍບໍ່ໄດ້ຖືກບັງຄັບໃຫ້ຮັບພິທີຕັດ.[4]ເລື່ອງນີ້ເກີດຂຶ້ນເພາະພວກພີ່ນ້ອງ
ທີ່ແປກປອມໄດ້ລັກລອບເຂົ້າມາ ເພື່ອສອດແນມເບິ່ງເສລີພາບ ຂອງພວກເຮົາທີ່ມີຢູ່ໃນອົງພຣະເຢຊູຄຣິດເຈົ້າ.
ພວກເຂົາໄດ້ຫວັງຈະບັງຄັບພວກເຮົາ ໃຫ້ກັບໄປເປັນຂ້ອຍຂ້າອີກ,[5]ແຕ່ພວກເຮົາ ບໍ່ໄດ້ອ່ອນຍອມ ຕໍ່ພວກເຂົາ ແມ່ນແຕ່ນາທີດຽວ,
ເພື່ອຈະໄດ້ຮັກສາຄວາມສັດຈິງ ຂອງຂ່າວປະເສີດ ນັ້ນໄວ້ສຳລັບເຈົ້າທັງຫລາຍຕໍ່ໄປຢ່າງບໍ່ມີການປ່ຽນແປງ.
[6]ແຕ່ບັນດາຄົນທີ່ເບິ່ງເຫມືອນເປັນຄົນສຳຄັນ (ບໍ່ວ່າພວກເຂົາຈະເຄີຍເປັນຫຍັງມາກ່ອນແລ້ວກໍຕາມ ກໍບໍ່ສຳຄັນຢ່າງໃດຕໍ່ຂ້າພະເຈົ້າ, ພຣະເຈົ້າ
ຊົງບໍ່ລຳອຽງ) - ຂ້າພະເຈົ້າ ກ່າວສິ່ງເຫລົ່ານີ້, ຜູ້ທີ່ເບິ່ງ ຄືສຳຄັນແຕ່ບໍ່ໄດ້ເພີ່ມເຕີມຫຍັງໃຫ້ແກ່ຂ້າພະເຈົ້າ.[7]ກົງກັນຂ້າມ,
ພວກເຂົາໄດ້ເຫັນວ່າຂ້າພະເຈົ້າ ໄດ້ຮັບມອບຫມາຍໃຫ້ປະກາດຂ່າວປະເສີດ ແກ່ຄົນທີ່ບໍ່ຖືພິທີຕັດ, ເຊັ່ນດຽວກັບເປໂຕ ທີ່ໄດ້ຮັບມອບ
ຫມາຍໃຫ້ປະກາດຂ່າວປະເສີດ ແກ່ຄົນທີ່ຖືພິທີຕັດ.[8]ດ້ວຍວ່າ, ພຣະເຈົ້າຜູ້ໄດ້ຊົງໃຫ້ ເປໂຕ ເປັນອັກຄະສາວົກ ໄປຫາພວກທີ່ຖືພິທີຕັດ,
ກໍໄດ້ຊົງກະທຳການເຫມືອນກັນ ໃນຂ້າພະເຈົ້າເພື່ອໃຫ້ໄປຫາຄົນຕ່າງຊາດ.
[9]ເມື່ອຢາໂກໂບ, ກັບເກຟາ ແລະ ໂຢຮັນ, ຜູ້ທີ່ພວກເຂົາຖືວ່າ ຜູ້ກໍ່ຕັ້ງ ຄຣິສຕະຈັກ ໄດ້ເຂົ້າໃຈພຣະຄຸນ ທີ່ໄດ້ຊົງປະທານແກ່ຂ້າພະເຈົ້າແລ້ວ,
ພວກເຂົາ ກໍໄດ້ຍື່ນມືຂວາ ແຫ່ງການສາມັກຄີທັມໃຫ້ແກ່ ບາຣະນາບາ ແລະ ຂ້າພະເຈົ້າ. ພວກເຂົາກະທຳດັ່ງນີ້
ເພື່ອໃຫ້ຂ້າພະເຈົ້າໄປຫາຄົນຕ່າງຊາດ, ແລະ ເພື່ອນພວກເຂົາ ຈະໄປຍັງຄົນທີ່ຖືພິທີຕັດ.[10]ພວກເຂົາໄດ້ຮຽກຮ້ອງໃຫ້ ຂ້າພະເຈົ້າຄິດເຖິງ
ຄົນຍາກຈົນ, ຊຶ່ງກໍເປັນສິ່ງທີ່ຂ້າພະເຈົ້າຮ້ອນຮົນໃຈທີ່ຈະເຮັດຢູ່ແລ້ວ.
[11]ແຕ່ເຄຟາສ ໄດ້ມາຫາອັນຕີໂອເຂັຍແລ້ວ, ຂ້າພະເຈົ້າໄດ້ຄັດຄ້ານຕໍ່ຫນ້າເພິ່ນ ເພາະວ່າເພິ່ນໄດ້ປະກາດຜິດ.[12]ກ່ອນທີ່ຄົນຂອງ ຢາໂກໂບ,
ໄດ້ມາເຖິງທີ່ນັ້ນ ເຄຟາສ ໄດ້ກິນຢູ່ຮ່ວມກັບຄົນຕ່າງຊາດ. ແຕ່ພໍຄົນເຫລົ່ານັ້ນມາເຖິງແລ້ວ, ເພິ່ນໄດ້ຢຸດ ແລະ ກໍຖອຍອອກມາ ຈາກຄົນຕ່າງຊາດ.
ເພາະເພິ່ນຢ້ານພວກທີ່ຖືພິທີຕັດ.
[13]ສ່ວນພີ່ນ້ອງຊາວຢິວທີ່ເຫຼືອ ກໍເຮັດເຫມືອນເສແສ້ງ. ແມ່ນແຕ່ ບາຣະນາບາ ກໍຫລົງປະພຶດຕາມ ຄົນເຫລົ່ານັ້ນ ເຫມືອນກັນ.
[14]ແຕ່ເມື່ອຂ້າພະເຈົ້າ ໄດ້ເຫັນວ່າພວກເພິ່ນບໍ່ໄດ້ປະພຶດຕາມຄວາມຈິງ ແຫ່ງຂ່າວປະເສີດນີ້, ຂ້າພະເຈົ້າຈຶ່ງເວົ້າກັບ ເຄຟາສ
ຕໍ່ຫນ້າຄົນທັງຫມົດນັ້ນວ່າ, “ຖ້າທ່ານເປັນຄົນຢິວ ຍັງດຳເນີນຊີວິດເຫມືອນຄົນຕ່າງຊາດ ແທນທີ່ຈະເຮັດເຫມືອນຄົນຢິວແລ້ວ.
ທ່ານກໍຍັງບັງຄັບຄົນຕ່າງຊາດ ໃຫ້ດຳເນີນຊີວິດເຫມືອນຄົນຢິວໄດ້ແນວໃດ?”
[15]ພວກເຮົາເປັນຢິວ ໂດຍກຳເນີດ ແລະ ບໍ່ແມ່ນ ພວກຕ່າງຊາດທີ່ເປັນຄົນບາບ;[16]ແຕ່ພວກເຮົາ ກໍຮູ້ຢູ່ວ່າ ບໍ່ມີຜູ້ໃດ ຖືກຊົງຖືວ່າ ເປັນຄົນຊອບທັມໄດ້
ໂດຍການປະຕິບັດ ຕາມກົດບັນຍັດ ແຕ່ໂດຍທາງຄວາມເຊື່ອ ໃນ ພຣະເຢຊູຄຣິດເຈົ້າເທົ່ານັ້ນ. ເຖິງແມ່ນ ພວກເຮົາກໍຍັງເຊື່ອວາງໃຈ
ໃນພຣະເຢຊູຄຣິດເຈົ້າ ເພື່ອຈະໄດ້ຊົງຖືວ່າເປັນຄົນຊອບທັມ ໂດຍຄວາມເຊື່ອໃນພຣະຄຣິດເຈົ້າ ແລະ ບໍ່ແມ່ນໂດຍການປະຕິບັດຕາມກົດບັນຍັດ.
ເພາະວ່າໂດຍການປະຕິບັດຕາມກົດບັນຍັດນັ້ນ ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນ ຄົນຊອບທັມໄດ້.
[17]ແຕ່ຖ້າ, ຂະນະທີ່ພວກເຮົາ ສະແຫວງຫາເພື່ອໃຫ້ພວກເຮົາ ຖືກນັບຖືວ່າ ເປັນຄົນຊອບທັມ ໂດຍພຣະຄຣິດເຈົ້ານັ້ນ
ກັບພົບວ່າພວກເຮົາເອງກໍຍັງເປັນຄົນບາບຢູ່, ສະນັ້ນ ພຣະຄຣິດເຈົ້າຈະຊົງເປັນຜູ້ສົ່ງເສີມຄວາມບາບບໍ? ບໍ່ເປັນຢ່າງນັ້ນຢ່າງແນ່ນອນ!
[18]ເພາະວ່າຖ້າຂ້າພະເຈົ້າ ສ້າງຄວາມເຊື່ອຫມັ້ນ ຂອງຂ້າພະເຈົ້າ ໂດຍການຮັກສາຄວາມຊອບທັມ ທາງກົດບັນຍັດນັ້ນ
ຊຶ່ງຂ້າພະເຈົ້າເຄີຍທຳລາຍລົງ ແລ້ວຂຶ້ນມາອີກ ຂ້າພະເຈົ້າ ກໍສະແດງຕົວເອງວ່າເປັນຜູ້ລ່ວງລະເມີດຄຳບັນຍັດ.[19]ເຫດວ່າ ໂດຍທາງກົດບັນຍັດນັ້ນ
ຂ້າພະເຈົ້າໄດ້ ຕາຍຈາກກົດບັນຍັດແລ້ວ ເພື່ອເຮົາຈະໄດ້ມີຊີວິດຢູ່ ສຳລັບພຣະເຈົ້າ.
[20]ຖ້າຂ້າພະເຈົ້າ ຖືກຕຶງໄວ້ກັບພຣະຄຣິດເຈົ້າແລ້ວ. ຂ້າພະເຈົ້າເອງບໍ່ມີຊີວິດຢູ່ຕໍ່ໄປ, ແຕ່ພຣະຄຣິດເຈົ້າຊົງມີຊີດວິດຢູ່ໃນຂ້າພະເຈົ້າ.
ຊີວິດຊຶ່ງຂ້າພະເຈົ້າ ດຳເນີນຢູ່ໃນຮ່າງກາຍນີ້. ຂ້າພະເຈົ້າດຳເນີນຢູ່ໂດຍຄວາມເຊື່ອ ໃນພຣະບຸດຂອງພຣະເຈົ້າ ຜູ້ທີ່ຊົງຮັກພວກເຮົາ ແລະ
ໄດ້ຊົງສະຫລະຊີວິດຕົວເອງເພື່ອຂ້າພະເຈົ້າ.[21]ຂ້າພະເຈົ້າບໍ່ໄດ້ລົບລ້າງພຣະຄຸນຂອງ ພຣະເຈົ້າ ເສຍໄປລ້າໆ,
ເພາະວ່າຖ້າຄວາມຊອບທັມໄດ້ມາໂດຍ ທາງກົດບັນຍັດແລ້ວ, ພຣະຄຣິດເຈົ້າກໍຊົງສິ້ນພຣະຊົນ ໂດຍບໍ່ມີປະໂຫຍດ!


generated on Tue Jun 17 19:01:42 2025

3 [1]ໂອຊາວຄາລາເຕຍຜູ້ບໍ່ມີຄວາມຄິດເອີຍ! ແມ່ນຜູ້ໃດຫນໍ ທີ່ໄດ້ສະກົດຈິດໃຈ ຂອງພວກເຈົ້າໃຫ້ເຫັນຜິດໄປ?
ທັງໆທີ່ພາບຂອງພຣະເຢຊູຄຣິດເຈົ້າ ຖືກຄຶງໄວ້ທີ່ໄມ້ກາງແຂນ ກໍໄດ້ປາກົດແຈ້ງແກ່ຕາພວກເຈົ້າຢ່າງຄັກແນ່ແລ້ວ.[2]ນີ້ເປັນພຽງສິ່ງຫນຶ່ງ
ທີ່ຂ້າພຣະເຈົ້າຕ້ອງການຮຽນຮູ້ຈາກທ່ານວ່າ: ທ່ານໄດ້ຮັບພຣະວິຍານນັ້ນ ໂດຍການປະຕິບັດຕາມກົດບັນຍັດ ຫລື
ໂດຍການເຊື່ອຟັງຂໍ້ຄວາມທີ່ໄດ້ຍິນນັ້ນ?[3]ເຈົ້າທັງຫລາຍ ຍັງໂງ່ເຖິງພຽງນັ້ນບໍ? ພວກເຈົ້າ ໄດ້ຕັ້ງຕົ້ນໂດຍທາງພຣະວິນຍານແລ້ວບັດນີ້ ພວກເຈົ້າ
ຈະສຳເຣັດລົງໂດຍເນື້ອຫນັງບໍ?

[4]ທ່ານໄດ້ຮັບປະສົບການຫລາຍຢ່າງ ໂດຍເສັຍປະໂຫຍດບໍ? ຖ້າເປັນການເສັຍປະໂຫຍດແທ້[5]ແລະ ພຣະອົງຜູ້ຊົງປະທານ ພຣະວິນຍານ
ແກ່ພວກເຈົ້າທັງຫລາຍ ແລະ ຊົງສຳແດງການອັດສະຈັນ ທ່າມກາງພວກເຈົ້າ ກໍຊົງກະທຳການເຫລົ່ານັ້ນ, ເພາະດ້ວຍການປະຕິບັດ
ຕາມກົດບັນຍັດ, ຫລື ເພາະດ້ວຍການເຊື່ອຟັງຂໍ້ຄວາມທີ່ໄດ້ຍິນນັ້ນ?
[6]ອັບຣາຮາມກ່າວວ່າ, "ໄດ້ເຊື່ອພຣະເຈົ້າ ແລະ ເພາະຄວາມເຊື່ອນັ້ນ ພຣະເຈົ້າຈຶ່ງຊົງຮັບວ່າເພິ່ນເປັນຄົນຊອບທັມ[7]ໃນທາງດຽວກັນ,
ພວກເຈົ້າຈຶ່ງຮັບຮູ້ໄວ້ວ່າ, ບັນດາຜູ້ທີ່ມີຄວາມເຊື່ອນັ້ນ ເປັນເຊື້ອສາຍຂອງອັບຣາຮາມ.[8]ພຣະຄັມພີ ໄດ້ບອກໃຫ້ຮູ້ລ່ວງຫນ້າວ່າ, ພຣະເຈົ້າ
ຈະຊົງນັບຄົນຕ່າງຊາດວ່າ ເປັນຜູ້ຊອບທັມໂດຍທາງຄວາມເຊື່ອ, ຈຶ່ງໄດ້ປະກາດຂ່າວປະເສີດແຈ້ງແກ່ ອັບຣາຮາມ ກ່ອນວ່າ, "ຊົນຊາດທັງຫລາຍ
ຈະໄດ້ຮັບພຣະພອນຈາກພຣະເຈົ້າ."[9]ເຫດສະນັ້ນ, ບັນດາຄົນທີ່ມີຄວາມເຊື່ອຈຶ່ງໄດ້ຮັບພຣະພອນ ຮ່ວມກັບອັບຣາຮາມ,
ບຸກຄົນແຫ່ງຄວາມເຊື່ອ.
[10]ດ້ວຍວ່າ, ທຸກຄົນທີ່ອາໄສການປະຕິບັດ ຕາມກົດບັນຍັດ ກໍຢູ່ໃຕ້ຄຳສາບແຊ່ງ; ແລະ ຕາມທີ່ມີຄຳຂຽນໄວ້ແລ້ວວ່າ, "ຜູ້ໃດ
ກໍຕາມທີ່ບໍ່ໄດ້ປະຕິບັດ ຕາມທຸກຂໍ້ທີ່ຂຽນໄວ້ໃນກົດບັນຍັດ ກໍຢູ່ໃຕ້ຄຳສາບແຊ່ງ."[11]ເປັນທີ່ ຮູ້ແຈ້ງ ແລ້ວວ່າ ບໍ່ມີມະນຸດຄົນໃດ
ທີ່ຊົງຖືວ່າເປັນຄົນຊອບທັມ ຕໍ່ຫນ້າພຣະເຈົ້າ ໂດຍການປະຕິບັດຕາມກົດບັນຍັດ, ເພາະມີຂຽນໄວ້ໃນພຣະຄັມພີວ່າ, ຜູ້ທີ່ຊົງຖືວ່າ
ເປັນຄົນຊອບທັມ ເພາະດ້ວຍຄວາມເຊື່ອເທົ່ານັ້ນຈະມີຊີວິດ.[12]ແຕ່ກົດບັນຍັດນັ້ນ ບໍ່ໄດ້ມາຈາກຄວາມເຊື່ອ, ເພາະ
"ຜູ້ໃດກໍຕາມທີ່ເຮັດທຸກສິ່ງເຫລົ່ານັ້ນຕາມກົດບັນຍັດ ກໍຈະດຳລົງຊີວິດຢູ່ຕາມກົດນັ້ນ."
[13]ພຣະຄຣິດເຈົ້າ ໄດ້ຊົງໄຖ່ພວກເຮົາ ໃຫ້ພົ້ນຈາກການສາບແຊ່ງ ຂອງກົດບັນຍັດ ໂດຍການທີ່ພຣະອົງຊົງຍອມຖືກສາບແຊ່ງແທນພວກເຮົາ -
ເພາະພຣະຄັມພີ ໄດ້ຂຽນໄວ້ວ່າ, "ທຸກຄົນທີ່ຖືກແຂວນໄວ້ທີ່ຕົ້ນໄມ້ ກໍຖືກສາບແຊ່ງແລ້ວ."-[14]ໂດຍມີຈຸດປະສົງ ເພື່ອໃຫ້ພຣະພອນທາງ
ອັບຣາຮາມ ຈະໄດ້ມາເຖິງ ບັນດາຄົນຕ່າງຊາດ ໂດຍທາງພຣະເຢຊູຄຣິດເຈົ້າ, ເພື່ອພວກເຮົາ ຈະໄດ້ຮັບພຣະວິນຍານຕາມພຣະສັນຍາ
ໂດຍທາງຄວາມເຊື່ອ.
[15]ພີ່ນ້ອງທັງຫລາຍ ຂອງເຮົາເອີຍ, ຂ້າພະເຈົ້າຂໍກ່າວຕາມແບບມະນຸດ. ໃນເມື່ອມະນຸດໄດ້ເຮັດຂໍ້ຄວາມ ຕົກລົງກັນໄວ້ແລ້ວ,
ກໍບໍ່ມີຜູ້ໃດຈະລົ້ມເລີກຂໍ້ຕົກລົງ ຫລື ເພີ່ມເຕີມໄດ້ອີກ.[16]ບັດນີ້ ບັນດາພຣະສັນຍາທັງຫລາຍທີ່ໄດ້ກ່າວໄວ້ກັບ ອັບຣາຮາມ ແລະ
ເຊື້ອສາຍຂອງເພິ່ນນັ້ນ ບໍ່ໄດ້ກ່າວວ່າ, "ເຫມືອນໃຫ້ແກ່ຄົນທັງຫລາຍ, ແຕ່ພຽງແຕ່ຄົນດຽວເທົ່ານັ້ນວ່າ, "ແລະ ໃຫ້ແກ່ເຊື້ອສາຍຂອງທ່ານ."
ຜູ້ທີ່ເປັນ ພຣະຄຣິດເຈົ້າ.
[17]ບັດນີ້, ຂ້າພະເຈົ້າວ່າ: ກົດບັນຍັດ, ທີ່ມາພາຍຫລັງເຖິງ ສີ່ຮ້ອຍສາມສິບປີ, ຈະບໍ່ເຮັດໃຫ້ ພັນທະສັນຍາຊຶ່ງພຣະເຈົ້າ ໄດ້ຊົງແຕ່ງຕັ້ງໄວ້ກ່ອນນັ້ນ
ຖືກລຶບລ້າງໄດ້.[18]ເພາະວ່າ ຖ້າການຮັບມໍຣະດົກ ມີມາໂດຍທາງກົດບັນຍັດ, ກໍບໍ່ແມ່ນ ໂດຍທາງພຣະສັນຍາອີກຕໍ່ໄປ.
ແຕ່ພຣະເຈົ້າໄດ້ຊົງໂຜດປະທານ ມໍຣະດົກນັ້ນ ໃຫ້ແກ່ອັບຣາຮາມ ໂດຍທາງພຣະສັນຍາ.
[19]ແລ້ວມີກົດບັນຍັດ ໄວ້ເພື່ອຫຍັງ? ໄດ້ເພີ່ມກົດບັນຍັດໄວ້ ເປັນເພາະການລ່ວງລະເມີດ,
ຈົນກວ່າເຊື້ອສາຍຂອງອັບຣາຮາມຈະໄດ້ມາເຖິງບັນດາຄົນທີ່ຮັບໃຊ້ພຣະສັນຍານັ້ນ ພວກເທວະດາໄດ້ແຕ່ງຕັ້ງ. ກົດບັນຍັດນັ້ນໄວ້
ໂດຍມືຂອງຄົນກາງຄົນຫນຶ່ງ.[20]ບັດນີ້ຖ້າມີຄົນກາງ ກໍສະແດງວ່າ ຕອ້ງມີສອງຝ່າຍ. ແຕ່ພຣະເຈົ້າຊົງເປັນຝ່າຍດຽວນັ້ນ.
[21]ຖ້າດັ່ງນັ້ນ ກົດບັນຍັດຂັດແຍ້ງ ກັບພຣະສັນຍາຂອງພຣະເຈົ້າບໍ? ບໍ່ແມ່ນເຊັ່ນນັ້ນແນ່ນອນ! ເພາະວ່າ ຖ້າກົດບັນຍັດ
ທີ່ໃຫ້ໄວ້ສາມາດເຮັດໃຫ້ມີຊີວິດຢູ່ໄດ້, ແລ້ວຄວາມຊອບທັມ ກໍຄົງຈະໄດ້ມີຢູ່ໂດຍທາງກົດບັນຍັດນັ້ນແທ້.[22]ແຕ່ພຣະຄັມພີໄດ້ຮວບຮວມ
ສິ່ງທັງໝົດໃຫ້ເຂົ້າຢູ່ພາຍໃຕ້ ອຳນາດຄວາມຜິດບາບ. ເພື່ອວ່າທຸກຄົນທີ່ເຊື່ອຈະໄດ້ຮັບຂອງປະທານ ຕາມທີ່ຊົງສັນຍາໄວ້ ຊຶ່ງໄດ້ຊົງໂຜດປະທານ
ໂດຍອາໄສ ຄວາມເຊື່ອໃນ ພຣະເຢຊູຄຣິດເຈົ້າເປັນຫລັກ.
[23]ແຕ່ກ່ອນທີ່ຄວາມເຊື່ອໃນພຣະຄຣິດ ຈະມາເຖິງນັ້ນ, ພວກເຮົາໄດ້ຕົກຢູ່ໃນຂອບເຂດອຳນາດຂອງກົດບັນຍັດ, ຖືກຄວບຄຸມໄວ້
ຈົນເຖິງຄວາມເຊື່ອຈະໄດ້ມາປາກົດ.[24]ເພາະສະນັ້ນກົດບັນຍັດ ຈຶ່ງໄດ້ຄວບຄຸມ ພວກເຮົາໄວ້ ຈົນກວ່າ ພຣະຄຣິດເຈົ້າສະເດັດມາ,
ເພື່ອວ່າພວກເຮົາ ຈະໄດ້ເປັນຄົນຊອບທັມ ໂດຍທາງຄວາມເຊື່ອ.[25]ແຕ່ບັດນີ້ຄວາມເຊື່ອນັ້ນກໍມາເຖິງແລ້ວ,
ພວກເຮົາຈຶ່ງບໍ່ໄດ້ຢູ່ພາຍໃຕ້ຜູ້ຄວບຄຸມອີກແລ້ວ.[26]ເພາະວ່າເຈົ້າທັງຫລາຍ ກໍເປັນບຸດຂອງພຣະເຈົ້າ ໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດເຈົ້າ.
[27]ພວກທ່ານທຸກຄົນ ທີ່ໄດ້ຮັບບັບຕິສະມາ ເຂົ້າໃນພຣະຄຣິດເຈົ້າແລ້ວ, ຄົນນັ້ນ ກໍໄດ້ສວມຊີວິດຂອງພຣະຄຣິດເຈົ້າ.[28]ຈະບໍ່ມີຄົນຍິວ ແລະ
ຄົນກຣີກ, ຈະບໍ່ມີ ທາດ ແລະ ໄທ, ຈະບໍ່ເປັນ ຊາຍ ແລະ ຍິງ, ເພາະພວກເຈົ້າທຸກຄົນ ເປັນອັນຫນຶ່ງອັນດຽວກັນ ໃນອົງພຣະເຢຊູຄຣິດເຈົ້າ.
[29]ຖ້າພວກເຈົ້າ ເປັນຄົນຂອງພຣະຄຣິດເຈົ້າ ແລ້ວ ພວກເຈົ້າກໍເປັນເຊື້ອສາຍຂອງອັບຣາຮາມ, ຄືເປັນຜູ້ໄດ້ຮັບມໍຣະດົກ ຕາມພຣະສັນຍາ.


generated on Tue Jun 17 19:01:42 2025

4 [1]ຂ້າພະເຈົ້າ ຂໍກ່າວດັ່ງນີ້ວ່າ, ຕາບໃດທີ່ເຈົ້າຂອງມໍຣະດົກ ຍັງເປັນເດັກນ້ອຍຢູ່ ກໍບໍ່ ແຕກຕ່າງຫຍັງກັບຂ້ອຍຂ້າ, ເຖິງແມ່ນວ່າ
ເປັນເຈົ້າຂອງຊັບສິນທັງຫມົດກໍຕາມ.[2]ແຕ່ເຂົາກໍຍັງຢູ່ໃຕ້ບັງຄັບຂອງຜູ້ປົກຄອງ ແລະ ຜູ້ດູແລຊັບສິນ ຈົນເຖິງເວລາທີ່ພໍ່ຂອງລາວໄດ້ກຳນົດ.

[3]ພວກເຮົາ ກໍເຫມືອນກັນເມື່ອຍັງເປັນເດັກນ້ອຍ, ພວກເຮົາກໍຍັງຕົກເປັນທາດຮັບໃຊ້ ຢູ່ໃຕ້ອຳນາດຂອງສິ່ງສັກສິດຂອງໂລກ.
[4]ແຕ່ເມື່ອຄົບກຳນົດເວລາແລ້ວ ພຣະເຈົ້າໄດ້ຊົງໃຊ້ພຣະບຸດຂອງພຣະອົງ, ມາຊົງບັງເກີດນຳຍິງຄົນຫນຶ່ງ, ແລະ ຊົງມີຊີວິດຢູ່ພາຍໃຕ້ກົດບັນຍັດ.
[5]ເພື່ອຈະຊົງໄຖ່ເອົາຄົນເຫລົ່ານັ້ນ, ທີ່ຢູ່ໃຕ້ກົດບັນຍັດ ເພື່ອໃຫ້ພວກເຮົາ ໄດ້ຖານະເປັນບຸດ.
[6]ແລະ ເພາະເຈົ້າທັງຫລາຍ ເປັນບຸດຂອງພຣະເຈົ້າແລ້ວ, ພຣະອົງຈຶ່ງຊົງໃຊ້ ພຣະວິນຍານ
ແຫ່ງພຣະບຸດຂອງພຣະອົງເຂົ້າມາໃນໃຈຂອງພວກເຮົາ, ແລ້ວຮ້ອງວ່າ, “ອັບບາ” ຄື “ພຣະບິດາເຈົ້າ.”[7]ດັ່ງນັ້ນ
ທ່ານຈຶ່ງບໍ່ແມ່ນຂ້ອຍຂ້າອີກຕໍ່ໄປແຕ່ເປັນບຸດ ແລະ ຖ້າເປັນບຸດ ທ່ານກໍເປັນເຈົ້າຂອງມໍຣະດົກໂດຍຜ່ານທາງພຣະເຈົ້າດ້ວຍ.
[8]ແຕ່ກ່ອນນີ້, ເມື່ອເຈົ້າທັງຫລາຍຍັງບໍ່ຮູ້ຈັກພຣະເຈົ້າ, ພວກເຈົ້າກໍເປັນທາດຂອງສິ່ງຕ່າງໆຕາມທຳມະດາແລ້ວ, ມັນບໍ່ແມ່ນພະແທ້.
[9]ແຕ່ບັດນີ້ເມື່ອພວກເຈົ້າທັງຫລາຍຮູ້ຈັກພຣະເຈົ້າແລ້ວ, ຫລື ຈະເວົ້າໃຫ້ຖືກກວ່າ ກໍວ່າພຣະເຈົ້າຊົງຮູ້ຈັກພວກເຈົ້າທັງຫລາຍແລ້ວ, ດ້ວຍເຫດໃດ
ພວກເຈົ້າຈຶ່ງຈະກັບໄປຫາພວກວິຍານທີ່ຄອບງຳຟ້າອາກາດທີ່ອ່ອນແອ ແລະ ບໍ່ມີປະໂຫຍດ? ພວກເຈົ້າ
ຢາກຕົກເປັນຂ້ອຍຂ້າຂອງສິ່ງເຫລົ່ານັ້ນອີກບໍ?
[10]ພວກເຈົ້າທັງຫລາຍຖືຮັກສາ ວັນພິເສດ, ເດືອນ, ຣະດູ ແລະ ປີຕ່າງໆ![11]ຂ້າພະເຈົ້າ ວິຕົກນຳການທີ່ຂ້າພະເຈົ້າໄດ້ຫນັກຫນ່ວງ ເພື່ອທີ່ໄດ້ເຮັດ
ສຳລັບພວກເຈົ້ານັ້ນ ຈະບໍ່ເປັນປະໂຫຍດ.
[12]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຂ້າພະເຈົ້າຮ້ອງຂໍພວກທ່ານໃຫ້ເປັນເຫມືອນດັ່ງຂ້າພະເຈົ້າ, ຕາມທີ່ຈິງແລ້ວຂ້າພະເຈົ້າ
ກໍເຄີຍເປັນດັ່ງພວກທ່ານເຫມືອນກັນ. ພວກທ່ານ ບໍ່ໄດ້ທຳຮ້າຍຫຍັງຕໍ່ຂ້າພະເຈົ້າ.[13]ພວກທ່ານທັງຫລາຍຮູ້ຢູ່ວ່າ
ເປັນເພາະຄວາມເຈັບປວດທາງຮ່າງກາຍ ເມື່ອຕອນທີ່ຂ້າພະເຈົ້າເລີ່ມຕົ້ນ ປະກາດເລື່ອງຂ່າວປະເສີດແກ່ພວກທ່ານນັ້ນ.[14]ເຖິງແມ່ນວ່າ
ສຸຂະພາບຂອງຂ້າພະເຈົ້າ ຈະເປັນການທົດລອງໃຈເຈົ້າທັງຫລາຍກໍຕາມ, ພວກເຈົ້າ ກໍບໍ່ໄດ້ຫມິ່ນປະຫມາດ ຫລື ເບື່ອຫນ່າຍຂ້າພະເຈົ້າ.
ແຕ່ໄດ້ຕ້ອນຮັບຂ້າພະເຈົ້າເຫມືອນກັບ ເປັນທູດຂອງພຣະເຈົ້າ ຫລື ເຫມືອນກັບພຣະເຢຊູຄຣິດເຈົ້າເອງ.
[15]ເຫດສະນັ້ນ, ຄວາມສຸກຂອງພວກທ່ານທັງຫລາຍໄປໃສແລ້ວ ໃນຕອນນີ້? ເພາະຂ້າພະເຈົ້າເປັນພະຍານໃຫ້ພວກທ່ານໄດ້ວ່າ, ຖ້າເປັນໄປໄດ້,
ພວກທ່ານຄົງຈະຄວັດຫນ່ວຍຕາ ຂອງພວກທ່ານໃຫ້ແກ່ຂ້າພະເຈົ້າ.[16]ເວລານີ້, ຂ້າພະເຈົ້າໄດ້ກາຍເປັນສັດຕູ ຂອງພວກທ່ານທັງຫລາຍ
ຍ້ອນຂ້າພະເຈົ້າບອກຄວາມຈິງ ແກ່ພວກທ່ານຊັ້ນບໍ?
[17]ຄົນເຫລົ່ານັ້ນ ສົນໃຈພວກທ່ານທັງຫລາຍຢ່າງກະຕືລືລົ້ນ, ແຕ່ບໍ່ແມ່ນດ້ວຍຄວາມຫວັງດີເລີຍ.
ພວກເຂົາພຽງແຕ່ຢາກແຍກພວກທ່ານອອກຈາກຂ້າພະເຈົ້າ ເທົ່ານັ້ນ, ເພື່ອວ່າ ພວກທ່ານທັງຫລາຍຈະໄດ້ຕິດຕາມພວກເຂົາ.
[18]ການເອົາອົກເອົາໃຈ ດ້ວຍຄວາມຫວັງດີ ກໍເປັນການດີຢູ່ທຸກເວລາ, ແລະ ບໍ່ແມ່ນແຕ່ເມື່ອເວລາ ຂ້າພະເຈົ້າຢູ່ນຳພວກທ່ານເທົ່ານັ້ນ.
[19]ລູກນ້ອຍທີ່ຮັກຂອງ ຂ້າພະເຈົ້າເອີຍ, ຂ້າພະເຈົ້າຕ້ອງເຈັບປວດ ເພາະພວກເຈົ້າທັງຫລາຍ ຈົນກວ່າພຣະຄຣິດເຈົ້າ
ຈະໄດ້ເປັນທີ່ສ້າງຂຶ້ນຢູ່ໃນພວກເຈົ້າ.[20]ຂ້າພະເຈົ້າປາຖະຫນາຢາກ ຢູ່ກັບພວກເຈົ້າໃນເວລານີ້ ແລະ ຢາກປ່ຽນວິທີເວົ້າຈາ ກັບພວກເຈົ້າ,
ເພາະເຮົາວິຕົກກັງວົນໃຈນຳ ພວກເຈົ້າທັງຫລາຍ.
[21]ພວກເຈົ້າທັງຫລາຍ, ຜູ້ທີ່ຢາກຢູ່ໃຕ້ກົດບັນຍັດ, ບອກຂ້າພະເຈົ້າວ່າພວກເຈົ້າ ບໍ່ໄດ້ຍິນສິ່ງທີ່ກົດບັນຍັດກ່າວບໍ?[22]ເພາະພຣະຄັມໄດ້ຂຽນໄວ້ວ່າ,
ອັບຣາຮາມ ມີລູກຊາຍ ສອງຄົນ, ຄົນຫນຶ່ງເກີດຈາກຍິງທີ່ເປັນຂ້ອຍຂ້າ ແລະ ອີກຄົນຫນຶ່ງເກີດຈາກຍິງທີ່ມີອິດສະຫລະ.[23]ແຕ່ລູກຊາຍຂອງ
ຜູ້ທີ່ໄດ້ຈາກຍິງຂ້ອຍຂ້າ ນັ້ນເກີດຕາມ ທັມະດາ, ແຕ່ລູກຊາຍຂອງ ຜູ້ທີ່ໄດ້ຈາກຍິງ ທີ່ມີອິດສະຫລະ ນັ້ນແມ່ນເກີດຕາມພຣະສັນຍາ.
[24]ຂໍ້ຄວາມນີ້ ສາມາດອະທິບາຍໄດ້ ໂດຍໃຊ້ຄຳອຸປາມາປຽບທຽບ, ຍິງທັງສອງນັ້ນ ໄດ້ແກ່ພັນທະສັນຍາສອງຢ່າງ. ຜູ້ຫນຶ່ງຊື່ວ່າຮາກາ
ນາງເກີດລູກ ທີ່ເປັນຂ້ອຍຂ້າ ຈຶ່ງໄດ້ຮັບ ພັນທະສັນຍາ ມາຈາກພູເຂົາຊີນາຍ.[25]ນາງຮາການັ້ນໄດ້ແກ່ ພູເຂົາຊີນາຍ ໃນປະເທດອາຣາເບຍ;
ປຽບເຖິງນະຄອນເຢຣູຊາເລັມ, ໃນປະຈຸບັນເພາະນາງຢູ່ໃນສະພາບຂອຍຂ້າ ພ້ອມທັງລູກໆຂອງນາງ.
[26]ແຕ່ວ່ານະຄອນເຢຣູຊາເລັມ ທີ່ຢູ່ເບື້ອງເທິງນັ້ນເປັນອິດສະຫລະ ແລະ ນາງກໍເປັນແມ່ຂອງພວກເຮົາ.[27]ເພາະມີພຣະຄັມພີ
ຂຽນໄວ້ວ່າ,“ຈົ່ງຊົມຊື່ນຍິນດີ ໂອຍິງຫມັນຜູ້ບໍ່ເຄີຍເກີດລູກເອີຍ, ຈົ່ງໂຮ່ຮ້ອງຂຶ້ນດ້ວຍຄວາມຊົມຊື່ນຍິນດີສາ ເຈົ້າຜູ້ບໍ່ເຄີຍເຈັບທ້ອງຖືພາ
ເພາະວ່າຄົນທີ່ເປັນບຸດຂອງແມ່ ທີ່ເຄີຍເປັນຫມັນ ກໍຍັງມີຫລວງຫລາຍກວ່າບຸດຂອງຍິງທີ່ມີຜົວ.”
[28]ແຕ່ບັດນີ້, ພີ່ນ້ອງທັງຫລາຍຂອງເຮົາເອີຍ, ພວກເຈົ້າກໍເປັນລູກໆແຫ່ງພຣະສັນຍາເຊັ່ນດຽວກັບ ອີຊາກ.[29]ໃນຄາວນັ້ນ ຜູ້ທີ່ເກີດຕາມເນື້ອຫນັງ
ໄດ້ຂົ່ມເຫັງ ຜູ້ທີ່ເກີດຕາມພຣະວິນຍານ ສັນໃດ ແລະ ປະຈຸບັນນີ້ ກໍຍັງເປັນເຫມືອນກັນ ສັນນັ້ນ.
[30]ແຕ່ພຣະຄັມພີ ກ່າວວ່າຢ່າງໃດ? ກໍກ່າວວ່າ, “ຈົ່ງໄລ່ຍິງຂ້ອຍຂ້າ ແລະ ລູກຂອງນາງຫນີໄປເສັຍ. ດ້ວຍວ່າ,
ລູກຂອງຍິງຂ້ອຍຂ້າຈະບໍ່ໄດ້ຮັບມໍຣະດົກ ຮ່ວມກັບລູກຂອງຍິງ ທີ່ບໍ່ເປັນຂ້ອຍຂ້າ.”[31]ເຫດສະນັ້ນ, ພີ່ນ້ອງທັງຫລາຍເອີຍ,
ພວກເຮົາບໍ່ເປັນລູກຂອງຍິງຂ້ອຍຂ້າ ແຕ່ເປັນລູກຂອງຍິງທີ່ບໍ່ເປັນຂ້ອຍຂ້າ.


generated on Tue Jun 17 19:01:42 2025

5 [1]ເພື່ອເສລີພາບນັ້ນແຫລະ ພຣະຄຣິດເຈົ້າຈຶ່ງໄດ້ປົດປ່ອຍພວກເຮົາໃຫ້ເປັນ ອິດສະຫລະ. ສະນັ້ນ, ຈົ່ງຕັ້ງຫມັ້ນຢູ່ ແລະ ຢ່າຍອມປ່ອຍຕົວເອງ
ໃຫ້ຕົກເປັນຂ້ອຍຂ້າອີກ.[2]ຂ້າພະເຈົ້າ, ຄືໂປໂລ, ຂໍບອກພວກເຈົ້າວ່າ ຖ້າພວກເຈົ້າຍອມຮັບພິທີຕັດ, ກໍຫມາຍຄວາມວ່າ ພຣະຄຣິດເຈົ້າ
ບໍ່ເປັນປະໂຫຍດຫຍັງ ສຳລັບພວກເຈົ້າເລີຍ.

[3]ຂ້າພະເຈົ້າຂໍຢັ້ງຢືນໃຫ້ທຸກຄົນ ທີ່ຮັບເຂົ້າພິທີຕັດອີກວ່າ ຜູ້ນັ້ນກໍຖືກຜູກມັດ ໃຫ້ປະຕິບັດຕາມກົດບັນຍັດທັງຫມົດ.
[4]ພວກເຈົ້າທີ່ພະຍາຍາມເປັນຜູ້ຊອບທັມ ໂດຍປະຕິບັດຕາມກົດບັນຍັດ, ຄົນນັ້ນກໍຕັດຕົນເອງ ອອກຈາກພຣະຄຣິດເຈົ້າ, ທ່ານໄດ້ຫລຸດຕົກ
ຈາກພຣະຄຸນເສຍແລ້ວ.
[5]ເພາະວ່າໂດຍພຣະວິນຍານ, ໂດຍຄວາມເຊື່ອ, ພວກເຮົາກໍກຳລັງລໍຄອຍ ເພື່ອໃຫ້ມີຄວາມຫມັ້ນໃຈໃນຄວາມຊອບທັມນັ້ນ.[6]ການຮັບພິທີຕັດຫລື
ບໍ່ຮັບ ກໍບໍ່ມີຜົນຫຍັງ, ແຕ່ສິ່ງສຳຄັນແມ່ນຄວາມເຊື່ອ ທີ່ສະແດງອອກ ໂດຍທາງຄວາມຮັກເທົ່ານັ້ນ.[7]ພວກເຈົ້າ ກຳລັງແລ່ນແຂ່ງຂັນດີຢູ່ແລ້ວ
ແມ່ນຜູ້ໃດຂັດຂວາງ ພວກເຈົ້າບໍ່ໃຫ້ເຊື່ອຟັງຄວາມຈິງ?[8]ການຊັກຊວນນັ້ນບໍ່ໄດ້ມາຈາກພຣະເຈົ້າ ອົງຜູ້ຊົງເອີ້ນເອົາພວກເຈົ້າ!
[9]ເຊື້ອແປ້ງພຽງແຕ່ນ້ອຍດຽວ ກໍເຮັດໃຫ້ແປ້ງນວດທັງກ້ອນຟູຂຶ້ນ.[10]ຂ້າພະເຈົ້າໄວ້ໃຈໃນຕົວທ່ານ ໃນອົງພຣະຜູ້ເປັນເຈົ້າວ່າເຈົ້າທັງຫລາຍ
ຈະບໍ່ມີຄວາມຄິດຢ່າງອື່ນ. ແຕ່ຝ່າຍຜູ້ທີ່ມາກໍ່ກວນ ຈະໄດ້ຮັບໂທດຂອງຕົນເອງ ແມ່ນແຕ່ພວກເຂົາຈະເປັນຜູ້ໃດກໍຕາມ.
[11]ພີ່ນ້ອງ ທັງຫລາຍເອີຍ, ຖ້າຂ້າພະເຈົ້າຍັງເທດສະຫນາ ຊັກຊວນໃຫ້ຮັບພິທີຕັດ ດ້ວຍເຫດໃດ ຂ້າພະເຈົ້າຈຶ່ງຍັງຖືກຂົ່ມເຫັງຢູ່? ຖ້າເປັນດັ່ງນັ້ນ
ອຸປະສັກເລື່ອງໄມ້ກາງແຂນຖືກທຳລາຍໄປແລ້ວ.[12]ຖ້າຂ້າພະເຈົ້າ ຢາກໃຫ້ບັນດາຄົນທີ່ນຳພວກທ່ານຫລົງທາງຕອນຕົວເອງເສັຍ.
[13]ພີ່ນ້ອງທັງຫລາຍທີ່ຂ້າພະເຈົ້າເອີຍ ພວກເຈົ້າໃຫ້ມີເສລີພາບ, ແຕ່ຢ່າໃຊ້ເສລີພາບນັ້ນ ເປັນຊ່ອງທາງປ່ອຍຕົວ ໄປຕາມຕັນຫາຂອງຮ່າງກາຍ;
ແຕ່ຈົ່ງຮັບໃຊ້ຊຶ່ງກັນ ແລະ ກັນດ້ວຍຄວາມຮັກເທີ້ນ.[14]ດ້ວຍວ່າ, ກົດບັນຍັດທັງຫມົດກໍລວມເຂົ້າໃນຂໍ້ດຽວນີ້ ຄື: “ຈົ່ງຮັກ ເພື່ອນບ້ານ
ເຫມືອນຮັກຕົນເອງ.”[15]ແຕ່ຖ້າພວກເຈົ້າ ກັດ ແລະ ກິນເນື້ອກັນ ແລະກັນ, ຈົ່ງລະວັງໃຫ້ດີພວກເຈົ້າຈະທຳລາຍ ຊຶ່ງກັນແລະກັນ.
[16]ແຕ່ຂ້າພະເຈົ້າຂໍບອກວ່າ, ຈົ່ງດຳເນີນຊີວິດຕາມພຣະວິນຍານ ແລະ ພວກເຈົ້າ ຈະບໍ່ໄດ້ເຮັດຕາມສັນດານ ຕັນຫາມະນຸດ.[17]ດ້ວຍວ່າ,
ຄວາມຕ້ອງການຂອງ ເນື້ອຫນັງ ກໍຕໍ່ສູ້ ກັບ ພຣະວິນຍານຢ່າງຮຸນແຮງ ແລະ ຄວາມຕ້ອງການ ຂອງພຣະວິນຍານ ກໍຕໍ່ສູ້ ກັບ ສັນດານ ຕັນຫາ
ມະນຸດຢ່າງຮຸນແຮງ, ເພາະທັງສອງຝ່າຍຕ່າງຕໍ່ຕ້ານກັນ. ດັ່ງນັ້ນ, ສິ່ງທີ່ ພວກເຈົ້າຢາກເຮັດຈຶ່ງເຮັດບໍ່ໄດ້.[18]ສະນັ້ນ, ຖ້າ ພຣະວິນຍານ ຊົງນຳພາ
ພວກເຈົ້າ, ພວກເຈົ້າ ກໍບໍ່ຢູ່ໃຕ້ກົດບັນຍັດ.
[19]ບັດນີ້ ກິຈະການແຫ່ງ ສັນດານມະນຸດ ກໍປາກົດແຈ້ງດັ່ງນີ້: ຄື ການຫລິ້ນຊູ້, ຄວາມບໍ່ສະອາດ, ຄວາມປະພຶດຊົ່ວຮ້າຍ,
[20]ການຂາບໄຫວ້ຮູບເຄົາຣົບ, ການເຊື່ອ, ເວດມົນຄາຖາ, ການເປັນສັດຕູກັນ, ການວິວາດຜິດຖຽງກັນ, ການເຫິງສາກັນ, ການຄຽດແຄ້ນກັນ
ແລະ ການມັກໃຫຍ່ໃຝ່ສູງຕໍ່ກັນ, ການແຕກແຍກກັນ, ການຖືພັກຖືພວກ,[21]ການອິດສາກັນ, ການເສບ ສຸຣາຢາເມົາ, ການກິນລ້ຽງແບບຊົ່ວຊ້າ
ແລະ ການອື່ນໆ ອີກ ໃນທຳນອງດຽວກັນນີ້, ຂ້າພະເຈົ້າ ຂໍເຕືອນ ພວກເຈົ້າເຫມືອນກັນ ທີ່ເຄີຍເຕືອນມາແລ້ວວ່າ,
ຄົນທີ່ເຮັດສິ່ງເຫລົ່ານີ້ຈະບໍ່ມີໄດ້ຮັບ ແຜ່ນດິນຂອງພຣະເຈົ້າເປັນມໍລະດົກ.
[22]ແຕ່ຜົນຂອງພຣະວິນຍານນັ້ນຄື: ຄວາມຮັກ, ຄວາມຊົມຊື່ນຍິນດີ, ສັນຕິສຸກ, ຄວາມອົດທົນດົນນານ, ຄວາມເມດຕາປານີ, ຄວາມດີ,
ຄວາມສັດຊື່,[23]ຄວາມສຸພາບອ່ອນຫວານ, ການຮູ້ຈັກບັງຄັບຕົນ, ກົດຫມາຍທີ່ຫ້າມສິ່ງເຫລົ່ານີ້ກໍບໍ່ມີ.[24]ຜູ້ທີ່ຢູ່ຝ່າຍພຣະເຢຊູຄຣິດເຈົ້ານັ້ນ
ກໍໄດ້ເອົາຂອງສັນດານມະນຸດ ແລະ ຄວາມປາຖະຫນາ ກັບ ກິເລດຕັນຫາ ຄຶງໄວ້ທີ່ໄມ້ກາງແຂນແລ້ວ.
[25]ຖ້າພວກເຮົາມີຊີວິດຢູ່ໂດຍພຣະວິນຍານ, ກໍຈົ່ງດຳເນີນຊີວິດໄປຕາມພຣະວິນຍານນັ້ນ.[26]ພວກເຮົາບໍ່ຕ້ອງເປັນຄົນອວດຕົວ ຫລື ກຸກກວນໃຈກັນ
ຫລື ອິດສາກັນ ແລະ ກັນ.

 generated on Tue Jun 17 19:01:42 2025

6 [1]ພີ່ນ້ອງທັງຫລາຍເອີຍ, ຖ້າພວກເຮົາ ຫາກພົບຄົນທີ່ຫລົງເຮັດຜິດປະການໃດປະການຫນຶ່ງ, ພວກເຈົ້າທີ່ຢູ່ຝ່າຍພຣະວິນຍານ.
ຄວນຊ່ວຍສ້າງຜູ້ນັ້ນກັບຕົວໃຫມ່ ດ້ວຍວິນຍານແຫ່ງຄວາມສຸພາບອ່ອນຫວານ ຈົ່ງຄອຍລະວັງຕົວເອົາໄວ້, ເພື່ອວ່າ
ຕົນເອງຈະບໍ່ໄດ້ຖືກທົດລອງ ໃຫ້ເຮັດຜິດເຫມືອນກັນ.[2]ຈົ່ງຊ່ວຍຮັບພາລະຫນັກຂອງກັນແລະກັນ, ແລະ ຖ້າເຮັດດັ່ງນີ້ ພວກເຈົ້າກໍປະຕິບັດຕາມ
ກົດບັນຍັດຂອງພຣະຄຣິດເຈົ້າໃຫ້ສຳເລັດ.

[3]ເພາະຖ້າຜູ້ໃດຄິດວ່າຕົນເປັນຄົນສຳຄັນ ທັງໆທີ່ຕົນບໍ່ສຳຄັນຫຍັງ ຜູ້ນັ້ນກໍຫລອກລວງຕົນເອງ.[4]ທຸກຄົນຄວນສຳຫລວດ
ເບິ່ງການງານຂອງຕົນເອງ, ຖ້າການງານດີ ກໍຈົ່ງພູມໃຈໃນການງານນັ້ນ ໂດຍບໍ່ຕ້ອງປຽບທຽບ ໃສ່ກັບການງານຂອງຄົນອື່ນ.[5]ດ້ວຍວ່າ,
ທຸກຄົນຕ້ອງຮັບຜິດຊອບຕໍ່ພາຣະຂອງຕົນເອງ.
[6]ສ່ວນຄົນທີ່ຮັບພຣະທັມ ຄຳສອນ ແລ້ວຈົ່ງແບ່ງສິ່ງທີ່ດີທຸກຢ່າງ ໃຫ້ແກ່ຜູ້ທີ່ ສັ່ງສອນຕົນ.[7]ຢ່າເຂົ້າໃຈຜິດ ພວກເຈົ້າຈະຫລອກລວງພຣະເຈົ້າບໍ່ໄດ້.
ເພາະວ່າ ຜູ້ໃດຫວ່ານສິ່ງໃດ ລົງກໍຈະເກັບກ່ຽວສິ່ງນັ້ນ.[8]ເພາະຜູ້ທີ່ຫວ່ານເມັດ ຕາມຕັນຫາ ຂອງສັນດານມະນຸດ ກໍຈະໄດ້ເກັບກ່ຽວ
ຄວາມເປື່ອຍເນົ່າຕາມ ຕັນຫານັ້ນ. ແຕ່ຜູ້ທີ່ຫວ່ານຕາມພຣະວິນຍານ ກໍຈະໄດ້ເກັບກ່ຽວຜົນແຫ່ງຊີວິດນິຣັນດອນ ຈາກພຣະວິຍານ.
[9]ຢ່າໃຫ້ພວກເຮົາ ອິດເມື່ອຍໃນການເຮັດດີ, ເພາະຖ້າໃຈພວກເຮົາ ບໍ່ທໍ້ຖອຍ ພວກເຮົາກໍຈະໄດ້ເກັບກ່ຽວ ຜົນດີ ຕາມເວລາອັນສົມຄວນ.
[10]ເພາະສະນັ້ນ, ເມື່ອພວກເຮົາມີໂອກາດ ຈົ່ງເຮັດດີຕໍ່ທຸກຄົນ ເປັນຕົ້ນຕໍ່ຄອບຄົວ ທີ່ຮ່ວມຢູ່ໃນຄວາມເຊື່ອ.
[11]ຈົ່ງສັງເກດເບິ່ງໂຕຫນັງສື ທີ່ຂ້າພະເຈົ້າ ໄດ້ຂຽນມາຫາພວກເຈົ້າ ດ້ວຍມືຂອງຂ້າພະເຈົ້າເອງວ່າ ໂຕໃຫຍ່ເທົ່າໃດ.[12]ຕາມເນື້ອກາຍ
ຂົ່ມເຫັງບັງຄັບ ພວກເຈົ້າໃຫ້ ຮັບພິທີຕັດ ພວກເຂົາເຮັດແບບນີ້ ເພື່ອພວກເຂົາຈະບໍ່ໄດ້ຖືກ ຂົ່ມເຫັງຍ້ອນເລື່ອງໄມ້ກາງແຂນຂອງພຣະຄຣິສ
ພຽງແຕ່ເທົ່ານັ້ນ.[13]ເຖິງແມ່ນຄົນທີ່ໃຫ້ຮັບພິທີຕັດແລ້ວກໍຍັງບໍ່ປະຕິບັດຕາມກົດບັນຍັດ, ແຕ່ພວກເຂົາຢາກໃຫ້ພວກເຈົ້າຮັບພິທີຕັດ
ເພື່ອພວກເຂົາຈະເອົາເລື່ອງ ເນື້ອກາຍຂອງພວກເຈົ້າໄປອວດອ້າງ.
[14]ຂໍຢ່າໃຫ້ຂ້າພະເຈົ້າອວດອ້າງໃນເລື່ອງອື່ນເລີຍ. ນອກຈາກເລື່ອງໄມ້ກາງແຂນ ຂອງອົງພຣະເຢຊູຄຣິດເຈົ້າ
ຂອງເຮົາຊຶ່ງໂດຍທາງພຣະອົງນີ້ແຫລະ ໂລກໄດ້ຖືກຄຶງໄວ້ຈາກຂ້າພະເຈົ້າ ແລະ ຂ້າພະເຈົ້າກໍຖືກຄຶງໄວ້ສຳລັບໂລກ.[15]ເພາະວ່າການຮັບພິທີຕັດ
ຫລື ບໍ່ຮັບກໍບໍ່ແມ່ນສິ່ງສຳຄັນ, ແຕ່ສິ່ງສຳຄັນ ແມ່ນການໄດ້ຖືກສ້າງຂຶ້ນໃຫມ່.[16]ຂໍໃຫ້ສັນຕິສຸກ ແລະ ພຣະກະລຸນາຈົ່ງມີແກ່ທຸກຄົນ
ທີ່ປະຕິບັດຕາມກົດຢ່າງນີ້ ແລະ ທັງອິດສະຣາເອນ ຂອງພຣະເຈົ້າເທີ້ນ.
[17]ແຕ່ນີ້ໄປ ຂໍຢ່າໃຫ້ຜູ້ໃດລົບກວນ ຂ້າພະເຈົ້າ ເພາະຮອຍບາດແຜຂ້າພະເຈົ້າ ມີຮອຍເປັນຕາປະທັບຂອງພຣະເຢຊູເຈົ້າ
ຕິດຢູ່ທີ່ກາຍຂອງພຣະເຈົ້າ.[18]ພີ່ນ້ອງ ທັງຫລາຍເອີຍ, ຂໍໃຫ້ພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າ ຂອງພວກເຮົາ
ຈົ່ງສະຖິດຢູ່ກັບຈິດວິນຍານຂອງພວກເຈົ້າເທີ້ນ. ອາແມນ.

# ເອເຟໂຊ

1 [1]ໂປໂລ, ອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ ໂດຍນ້ຳພຣະໄທຂອງພຣະເຈົ້າ, ເຖິງຊາວເອເຟໂຊ ຜູ້ເປັນໄພ່ພົນຂອງພຣະເຈົ້າ,
ເປັນຜູ້ຊື່ສັດໃນອົງພຣະເຢຊູຄຣິດເຈົ້າ.[2]ຂໍພຣະຄຸນບັງເກີດແກ່ທ່ານທັງຫລາຍ ແລະ ທັງສັນຕິສຸກຈາກພຣະເຈົ້າພຣະບິດາ ແລະ
ຈາກອົງພຣະເຢຊູຄຣິດເຈົ້າ.

[3]ຂໍພຣະເຈົ້າ ແລະ ພຣະບິດາເຈົ້າຂອງອົງພຣະເຢຊູຄຣິດເຈົ້າໄດ້ຮັບການສັນລະເສີນ, ພຣະອົງຄືຜູ້ໄດ້ຊົງໂຜດປະທານພຣະພອນໃຫ້ເຮົາ
ດ້ວຍພຣະພອນຝ່າຍວິນຍານທຸກປະການໃນສະຫວັນສະຖານໃນພຣະຄຣິດເຈົ້າ.[4]ພຣະເຈົ້າໄດ້ຊົງເລືອກພວກເຮົາໄວ້ໃນພຣະອົງ
ຕັ້ງແຕ່ກ່ອນການເນລະມິດສ້າງໂລກ, ເພື່ອເຮົາຈະໄດ້ເປັນຄົນບໍຣິສຸດ ແລະ ປາສະຈາກຂໍ້ຕິຕຽນຕໍ່ ພຣະພັກພຣະອົງ.
[5]ພຣະເຈົ້າໄດ້ຊົງເລືອກພວກເຮົາໄວ້ກ່ອນລ່ວງຫນ້າແລ້ວ ເພື່ອໃຫ້ເຮົາ ໄດ້ຮັບການແຕ່ງຕັ້ງເປັນບຸດຂອງພຣະອົງ ໂດຍທາງພຣະເຢຊູຄຣິດເຈົ້າ,
ພຣະອົງຊົງກະທຳເຊັ່ນນີ້ ເພາະພຣະອົງຊອບພຣະໄທ ທີ່ຈະກະທຳຕາມຈຸດປະສົງຂອງພຣະອົງ.[6]ຜົນໄດ້ຮັບຄືພຣະເຈົ້າຊົງໄດ້ຮັບການສັນຣະເສີນ
ໃນພຣະຄຸນອັນຊົງພຣະກຽດຕິຍົດຂອງພຣະອົງ ຊຶ່ງເປັນສິ່ງທີ່ພຣະອົງປະທານ ແກ່ພວກເຮົາລ້າໆ ໂດຍທາງພຣະບຸດທີ່ຮັກ ຂອງພຣະອົງ.
[7]ເພາະໃນພຣະເຢຊູຄຣິດເຈົ້າ ພວກເຮົາໄດ້ຮັບການໄຖ່ ໂດຍຜ່ານທາງພຣະໂລຫິດຂອງພຣະອົງ ແລະ ການອະໄພບາບທັງປວງ,
ເຮົາໄດ້ຮັບສິ່ງນີ້ເພາະຄວາມມັ່ງຄັ່ງແຫ່ງພຣະຄຸນຂອງພຣະອົງ.[8]ພຣະອົງຊົງເຮັດໃຫ້ພຣະຄຸນ ບໍຣິບູນແກ່ພວກເຮົາໃນສະຕິປັນຍາ ແລະ
ໃນຄວາມຮູ້ແຈ້ງທັງຫມົດ.
[9]ພຣະເຈົ້າ ໄດ້ເຮັດໃຫ້ພວກເຮົາຮູ້ເຖິງຄວາມຈິງແຫ່ງແຜນການ ຂອງພຣະອົງ ທີ່ຖືກປິດບັງໄວ້, ຕາມພຣະປະສົງຂອງພຣະອົງ,
ແລະຊົງສະແດງໃຫ້ເຫັນແລ້ວໃນພຣະຄຣິດເຈົ້າ.[10]ໃນແຜນການອັນຄົບບໍຣິບູນຂອງພຣະອົງເມື່ອເຖິງເວລາກຳນົດ,
ພຣະອົງຈະຊົງຮວບຮວມທຸກສິ່ງທັງຢູ່ໃນສະຫວັນ ແລະ ເທິງແຜ່ນດິນໂລກ ເຂົ້າໄວ້ດ້ວຍກັນ, ໃນພຣະຄຣິດເຈົ້າ.
[11]ໃນພຣະຄຣິດເຈົ້ານັ້ນ ພວກເຮົາໄດ້ຖືກເລືອກໄວ້ເພື່ອເປັນມໍລະດົກຂອງພຣະເຈົ້າ. ພວກເຮົາໄດ້ຖືກຕັດສິນກ່ອນແລ້ວ ຕາມແຜນຂອງພຣະອົງ
ຜູ້ຊົງກະທຳທຸກສິ່ງທຸກຢ່າງ ຕາມພຣະປະສົງແຫ່ງນ້ຳພຣະໄທ ຂອງພຣະອົງ.[12]ພຣະເຈົ້າຊົງໄດ້ແຕ່ງຕັ້ງພວກເຮົາໄວ້ເພື່ອເປັນມໍລະດົກ
ເພື່ອໃຫ້ພວກເຮົາ ເປັນກຸ່ມຄົນທຳອິດ ທີ່ມີຄວາມເຊື່ອຫມັ້ນຫວັງໃຈໃນພຣະຄຣິດເຈົ້າ, ເຫດສະນັ້ນພວກເຮົາດຳລົງຊີວິດຢູ່
ເພື່ອເປັນທີ່ສັນຣະເສີນແດ່ພຣະສີຣິຂອງພຣະອົງ.
[13]ໃນພຣະຄຣິດເຈົ້ານັ້ນ, ທ່ານທັງຫຼາຍກໍເຊັ່ນກັນ, ຫຼັງຈາກທີ່ໄດ້ຮັບຟັງພຣະວັດຈະນະທັມແຫ່ງຄວາມຈິງ, ຄືຂ່າວປະເສີດ
ແຫ່ງຄວາມລອດຂອງທ່ານ ໃນພຣະອົງນັ້ນ, ທ່ານກໍໄດ້ວາງໃຈເຊື່ອແລະໄດ້ຖືກປະທັບຕາໄວ້ໂດຍພຣະວິນຍານບໍຣິສຸດເຈົ້າທີ່ຊົງສັນຍາ.
[14]ພຣະວິນຍານນັ້ນຄືເຄື່ອງມັດຈຳລ່ວງຫນ້າວ່າເຮົາຈະໄດ້ຮັບມໍຣະດົກ ຂອງພວກເຮົາກ່ອນເຖິງເວລາຄອບຄອງນີ້ກໍເພື່ອໃຫ້ເປັນທີ່ສັນຣະເສີນ
ແດ່ພຣະກຽດຕິຍົດຂອງພຣະອົງ.


generated on Tue Jun 17 19:01:42 2025

[15]ເຫດສະນັ້ນ, ນັບຕັ້ງແຕ່ເວລາທີ່ຂ້າພະເຈົ້າໄດ້ຍິນເຖິງເລື່ອງຄວາມເຊື່ອ ໃນອົງພຣະເຢຊູຄຣິດເຈົ້າ ແລະ
ເລື່ອງຄວາມຮັກທີ່ທ່ານມີຕໍ່ໄພ່ພົນທຸກຄົນ, [16]ຂ້າພຣະເຈົ້າກໍຂອບພຣະຄຸນພຣະເຈົ້າສຳລັບພວກເຈົ້າຢ່າງບໍ່ສິ້ນສຸດໄດ້ ແລະ ລະນຶກເຖິງພວກເຈົ້າ
ເມື່ອເຮົາພາວັນນາອະທິຖານ.
[17]ຂ້າພະເຈົ້າພາວັນນາອະທິຖານ ຂໍພຣະເຈົ້າຂອງອົງພຣະເຢຊູຄຣິດເຈົ້າ ຂອງເຮົາ ຄືພຣະບິດາເຈົ້າ ຜູ້ຊົງພຣະສະຫງ່າຣາສີ,
ໄດ້ຊົງໂຜດປະທານວິນຍານແຫ່ງປັນຍາ ແລະ ຄວາມຮູ້ແຈ້ງເຫັນຈິງເຖິງເລື່ອງຂອງພຣະອົງ. [18]ຂ້າພະເຈົ້າ
ຂໍອະທິຖານໃຫ້ດວງຕາແຫ່ງໃຈຂອງພວກເຈົ້າ ໄດ້ເຫັນຄວາມສະຫວ່າງ, ເພື່ອພວກເຈົ້າ ຈະໄດ້ເກີດຄວາມຫມັ້ນໃຈ
ໃນການຊົງເອີ້ນຂອງພຣະອົງ ແລະອະທິຖານຂໍໃຫ້ພວກເຈົ້າຮູ້ວ່າມໍຣະດົກ
ທີ່ພຣະເຈົ້າປະທານສຳລັບພວກໄພ່ພົນຂອງພຣະອົງນັ້ນມີສະຫງ່າຣາສີອັນອຸດົມສົມບູນພຽງໃດ.
[19]ຂ້າພະເຈົ້າອະທິຖານ ເພື່ອໃຫ້ທ່ານຮູ້ວ່າ ຣິດອຳນາດອັນໃຫຍ່ມະຫາສານຂອງພຣະອົງ ເຊິ່ງທຳການຢູ່ພາຍໃນເຮົາ ຜູ້ທີ່ເຊື່ອ, ຄວາມຍິ່ງໃຫ່ຍນີ້
ເທົ່າກັບຂະຫນາດຄວາມແຫ່ງຣິດທານຸພາບ ອັນໃຫຍ່ຫລວງຂອງພຣະອົງ. [20]ຄືຣິດເດດທີ່ກະທຳໃນພຣະຄຣິດເຈົ້າ ເມື່ອພຣະເຈົ້າຄືນພຣະຊົນ
ຂື້ນມາຈາກຄວາມຕາຍ ແລະຊົງໃຫ້ ປະທັບທີ່ເບື້ອງຂວາພຣະຫັດ ຂອງພຣະເຈົ້າໃນສະຫວັນສະຖານ. [21]ຜູ້ມີອຳນາດ, ຜູ້ມີຣິດເດດ,
ຜູ້ມີອານຸພາບ ແລະ ເຫນືອກວ່ານາມຊື່ທັງປວງ ທີ່ເອີ່ຍຂື້ນ ພຣະອົງຊົງຕັ້ງພຣະຄຣິດໄວ້ ບໍ່ແມ່ນສະເພາະໃນສະໄຫມນີ້ເທົ່ານັ້ນ,
ແຕ່ວ່າໃນສະໄຫມທີ່ຈະມາເຖິງດ້ວຍ.
[22]ພຣະເຈົ້າ ຊົງກະທຳໃຫ້ທຸກສິ່ງຢູ່ໃຕ້ພຣະບາດຂອງພຣະຄຣິດເຈົ້າ ແລະ ກະທຳໃຫ້ພຣະອົງເປັນປະມຸກ ເຫນືອສິ່ງສາຣະພັດໃນຄຣິສຕະຈັກ.
[23]ຊຶ່ງເປັນພຣະກາຍ ຂອງພຣະອົງເປັນຄວາມບໍຣິບູນ ດ້ວຍພຣະອົງຜູ້ຊົງເຕີມເຕັມທຸກສິ່ງໃນທຸກທາງ.


generated on Tue Jun 17 19:01:42 2025

2 1ແລະສ່ວນທ່ານນັ້ນ, ທ່ານໄດ້ຕາຍແລ້ວຝ່າຍວິນຍານ ຍ້ອນຄວາມບໍ່ເຊື່ອຟັງ ແລະ ເຮັດບາບນາໆປະການຂອງທ່ານ.
2ຄັ້ງຫນຶ່ງພວກເຈົ້າເຄີຍປະຕິບັດສິ່ງເຫຼົ່ານີ້ ຕາມຍຸກສະໄຫມຂອງໂລກ. ທ່ານໄດ້ດຳເນີນຊີວິດຕາມຜູ້ທີ່ມີຣິດອຳນາດປົກຄອງ
ຢູ່ໃນຍ່ານອາກາດ, ວິນຍານຊຶ່ງຄອບງຳ ຢູ່ທ່າມກາງຜູ້ທີ່ບໍ່ເຊື່ອຟັງ. 3ຄັ້ງຫນຶ່ງພວກເຮົາທຸກຄົນກໍເຄີຍດຳເນີນຊີວິດທ່າມກາງຄົນເຫລົ່ານີ້,
ຊຶ່ງກະທຳຕາມຄວາມປາຖະໜາຊົ່ວຕາມທຳມະຊາດເນື້ອຫນັງຂອງພວກເຮົາ, ແລະ ເຮົາໄດ້ກະທຳຕາມຄວາມຕ້ອງການຂອງເນື້ອຫນັງ ແລະ
ຄວາມຄິດ. ເຮົາຈຶ່ງເປັນຜູ້ທີ່ຕອ້ງຖືກລົງໂທດ ເຊັ່ນດຽວກັບຄົນອື່ນໆ.

4ແຕ່ດ້ວຍພຣະເຈົ້າ ຊົງກະລຸນາປານີ ດ້ວຍຄວາມເມດຕາ ເພາະຄວາມຮັກອັນຍິ່ງໃຫ່ຍ ທີ່ພຣະອົງຊົງຮັກພວກເຮົາ.
5ໃນຂະນະທີ່ພວກເຮົາຕາຍແລ້ວຍ້ອນຄວາມບໍ່ເຊື່ອຟັງ, ພຣະອົງຊົງນຳພວກເຮົາ ມາສູ່ຊີວິດໃຫມ່ດ້ວຍກັນກັບພຣະຄຣິດເຈົ້າ -
ທີ່ພວກເຮົາໄດ້ຮັບຄວາມລອດໄດ້ນັ້ນໂດຍພຣະຄຸນ. 6ພຣະເຈົ້າເຮັດໃຫ້ເຮົາເປັນຄືນມາດ້ວຍກັນ ແລະ ນັ່ງດ້ວຍກັນກັບພຣະຄຣິດ
ໃນສະຫວັນສະຖານ. 7ພຣະອົງທຳເຊັ່ນນັ້ນ ເພື່ອວ່າພຣະອົງຈະໄດ້ຊົງສຳແດງເຫັນເຖິງພຣະຄຸນອັນອຸດົມເຫລືອລົ້ນ ທີ່ຈະມາເຖິງ
ທັ້ງນີ້ໂດຍທາງພຣະເມດຕາຂອງພຣະອົງທີ່ສະແດງແກ່ເຮົາທັງຫລາຍໃນພຣະເຢຊູຄຣິດເຈົ້າ.
8ດ້ວຍວ່າພຣະຄຸນຂອງພຣະເຈົ້າ, ພວກເຈົ້າທັງຫລາຍຈຶ່ງໄດ້ຮັບຄວາມລອດ ໂດຍຜ່ານທາງຄວາມເຊື່ອ ແລະ ສິ່ງເຫລົ່ານີ້
ບໍ່ໄດ້ເກີດຈາກຕົວພວກເຈົ້າເຮັດເອງ, ແຕ່ເປັນຂອງປະທານຈາກພຣະເຈົ້າ. 9ບໍ່ແມ່ນໄດ້ມາຍ້ອນການປະຕິບັດ ຂອງພວກເຈົ້າເອງ ແລະ
ເພື່ອວ່າບໍ່ໃຫ້ຜູ້ໃດຜູ້ຫນຶ່ງໂອ້ອວດໄດ້. 10ເຮົາທັງຫລາຍຄື ສີພຣະຫັດຂອງພຣະອົງ, ທີ່ຊົງສ້າງຂຶ້ນໃນພຣະເຢຊູຄຣິດເຈົ້າ ເພື່ອໃຫ້ປະກອບການດີ
ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມລ່ວງຫນ້າໄວ້ກ່ອນແລ້ວ, ເພື່ອໃຫ້ເຮົາທັງຫລາຍໄດ້ປະຕິບັດຕາມ.
11ເຫດສະນັ້ນ ພວກເຈົ້າຊົງລະນຶກໄວ້ວ່າ ເມື່ອກ່ອນທ່ານເປັນຄົນຕ່າງຊາດໃນຝ່າຍເນື້ອຫນັງ. ພວກເຮົາຖືກເອີ້ນວ່າ, “ຝ່າຍບໍ່ຮັບພິທີຕັດ”
ຈາກພວກຝ່າຍ “ຝ່າຍຮັບພິທີຕັດ” ໂດຍມືຂອງມະນຸດ. 12ເມື່ອກ່ອນນັ້ນພວກທ່ານ ຖືກແຍກອອກຈາກພຣະຄຣິດເຈົ້າ. ທ່ານເປັນຄົນຕ່າງຊາດ
ສຳລັບຊາວອິດສະຣາເອນ. ເປັນຄົນແປກຫນ້າ ນອກພັນທະສັນຍາ ທີ່ປະກອບດ້ວຍພຣະສັນຍາ. ພວກເຈົ້າຈຶ່ງບໍ່ມີອະນາຄົດແນ່ນອນ ແລະ
ຢູ່ໃນໂລກຢ່າງຄົນທີ່ປາສະຈາກພຣະເຈົ້າ.
13ແຕ່ບັດນີ້ໂດຍສະເພາະ ພຣະເຢຊູຄຣິດເຈົ້າ ພວກເຮົາຊຶ່ງຄັ້ງຫນຶ່ງເຄີຍຢູ່ຫ່າງໄກຈາກພຣະເຈົ້າ ຖືກນຳເຂົ້າມາໃກ້ແລ້ວ
ໂດຍຜ່ານທາງພຣະໂລຫິດ ຂອງພຣະຄຣິດເຈົ້າ. 14ເພາະວ່າພຣະອົງຊົງ ເປັນອົງສັນຕິສຸກ ຂອງເຮົາທັງຫລາຍ ຜູ້ຊົງ ກະທຳໃຫ້ທັງສອງຝ່າຍ
ເຂົ້າເປັນພວກດຽວກັນໄດ້. ໂດຍເນື້ອຫນັງຂອງພຣະອົງເອງ ພຣະອົງຊົງທຳລາຍກຳແພງ ແຫ່ງຄວາມແຕກແຍກທີ່ຂວາງກັ້ນເຮົາໄວ້. 15ນັ້ນຄື
ພຣະອົງໄດ້ຊົງຍົກເລີກບັນຊີ ແລະ ກົດບັນຍັດຕ່າງໆ ເພື່ອຈະໄດ້ສ້າງຄົນໃຫມ່ ຄົນ ດຽວຂຶ້ນໃນພຣະອົງ, ແລະ ພຣະອົງຊົງສ້າງສັນຕິສຸກ.
16ພຣະຄຣິດເຈົ້າ ໃຫ້ຄົນທັງສອງພວກໄດ້ຄືນດີ ກາຍເປັນກາຍອັນດຽວກັນສຳລັບພຣະເຈົ້າ ໂດຍທາງໄມ້ກາງແຂນນັ້ນ
ພຣະອົງໄດ້ກຳຈັດຄວາມເປັນສັດຕຣູກັນໃຫ້ສູນສິ້ນໄປ.
17ພຣະເຢຊູເຈົ້າໄດ້ມາ ແລະ ໄດ້ປະກາດສັນຕິສຸກໃຫ້ພວກເຮົາ ທັງຜູ້ຢູ່ຫ່າງໄກ ແລະ ຜູ້ທີ່ຢູ່ໃກ້ກັບພຣະເຈົ້າ.
18ໂດຍທາງພຣະເຢຊູຄຣິດເຈົ້າທັງສອງພວກສາມາດເຂົ້າມາເຝົ້າພຣະບິດາເຈົ້າ ໂດຍພຣະວິນຍານອົງດຽວກັນ.
19ເຫດສະນັ້ນ, ເຈົ້າທັງຫລາຍ ຊຶ່ງເປັນຄົນຕ່າງຊາດ ຈຶ່ງບໍ່ແມ່ນຄົນແປກຫນ້າ ແລະ ຕ່າງດ້າວຕ່າງແດນອີກຕໍ່ໄປ. ແຕ່ພວກເຈົ້າ
ຄືໄພ່ພົນຜູ້ບໍຣິສຸດຂອງພຣະເຈົ້າ ແລະ ເປັນສະມະຊິກໃນຄອບຄົວຂອງພຣະເຈົ້າ. 20ພວກເຈົ້າໄດ້ຖືກສ້າງຂຶ້ນເທິງຮາກຖານ ຊຶ່ງພວກອັກຄະສາວົກ
ແລະ ພວກຜູ້ປະກາດພຣະທັມ, ແລະພຣະເຢຊູຄຣິດເຈົ້າເອງ ຊົງເປັນຫີນເສົາເອກ. 21ທຸກສ່ວນຂອງໂຄງຮ່າງ ກໍຕິດຕໍ່ເຊື່ອມສະຫນິດກັນດີ ແລະ
ຈະເຮີນຂຶ້ນເປັນວິຫານອັນສັກສິດໃນອົງພຣະຜູ້ເປັນເຈົ້າ. 22ໃນພຣະອົງນັ້ນ ພວກເຈົ້າກຳລັງຖືກກໍ່ຂຶ້ນ ໃຫ້ເປັນທີ່ສະຖິດ ຂອງພຣະເຈົ້າ
ໂດຍພຣະວິນຍານເຫມືອນກັນ.

 generated on Tue Jun 17 19:01:42 2025

3 [1]ເພາະເຫດນີ້, ຂ້າພະເຈົ້າ ຄືໂປໂລ, ຜູ້ຖືກເປັນນັກໂທດຂອງພຣະຄຣິດເຈົ້າ ເພື່ອເຫັນແກ່ພວກເຈົ້າທີ່ເປັນຄົນຕ່າງຊາດ.[2]ຂ້າພະເຈົ້າຄິດວ່າ
ພວກເຈົ້າຄົງໄດ້ຍິນ ເຖິງກິຈະກຳແຫ່ງພຣະຄຸນຂອງພຣະເຈົ້າ ຊຶ່ງພຣະອົງຊົງໄດ້ມອບຫມາຍພາຣະກິດນີ້ໃຫ້ ຂ້າພະເຈົ້າ ເພື່ອພວກເຈົ້າ.

[3]ຂ້າພະເຈົ້າ ຂຽນເຖິງທ່ານຕາມການສຳແດງທີ່ຂ້າພະເຈົ້າໄດ້ຮັບນີ້ ຄືຄວາມຈິງທີ່ປິດບັງຢູ່
ຊຶ່ງຂ້າພະເຈົ້າໄດ້ຂຽນໄວ້ຢ່າງຫຍໍ້ໆໃນຈົດຫມາຍອີກສະບັບ.[4]ເມື່ອທ່ານ ຈະອ່ານເບິ່ງແລ້ວ, ທ່ານກໍຈະສາມາດເຂົ້າໃຈ ເຖິງຄວາມເຂົ້າໃຈ
ຂອງຂ້າພະເຈົ້າ ກ່ຽວກັບຄວາມຈິງເລື່ອງ ພຣະຄຣິດເຈົ້າ ທີ່ເລິກລັບໄວ້ນັ້ນ.[5]ຊຶ່ງໃນສະໄຫມກ່ອນ ຄວາມຈິງເລື່ອງນີ້
ບໍ່ໄດ້ສຳແດງໃຫ້ແກ່ມະນຸດຄົນໃດ. ແຕ່ບັດນີ້ ໄດ້ເປີດເຜີຍໂດຍທາງ ພຣະວິຍານແກ່ບັນດາອັກຄະສາວົກ ແລະ ພວກຜູ້ປະກາດພຣະທັມ
ຂອງພຣະອົງແລ້ວ.
[6]ຄວາມຈິງທີ່ປິດບັງຢູ່ນີ້ໄດ້ແກ່ ຄົນຕ່າງຊາດ ໄດ້ເປັນຜູ້ຮັບມໍຣະດົກ, ແລະ ຮ່ວມກັນກັບສະມາຊິກຂອງພຣະກາຍອັນດຽວກັນ, ແລະ
ເປັນຜູ້ໄດ້ຮັບສ່ວນແບ່ງຕາມພຣະສັນຍາ ໃນພຣະເຢຊູຄຣິດເຈົ້າ ໂດຍທາງຂ່າວປະເສີດ.[7]ໄດ້ມາ ເປັນຜູ້ຮັບໃຊ້ຂ່າວປະເສີດນີ້ ຕາມຂອງປະທານ
ແຫ່ງພຣະຄຸນຂອງພຣະເຈົ້າ ຊຶ່ງໂຜດປະທານແກ່ຂ້າພະເຈົ້າ ທາງກິຈະການທີ່ກະທຳດ້ວຍຣິດອຳນາດຂອງພຣະອົງ.
[8]ພຣະເຈົ້າໄດ້ຊົງມອບຂອງປະທານນີ້ແກ່ຂ້າພະເຈົ້າ, ແມ່ນວ່າຈະເປັນຜູ້ ເລັກນ້ອຍທີ່ສຸດ ໃນບັນດາຄົນທີ່ບໍຣິສຸດຂອງພຣະເຈົ້າ.
ຂອງປະທານນີ້ເພື່ອໃຫ້ຂ້າພະເຈົ້າຄວນປະກາດຂ່າວປະເສີດ ແກ່ຄົນຕ່າງຊາດ ເຖິງຄວາມບໍຣິບູນຂອງພຣະຄຣິດເຈົ້າ ຊຶ່ງບໍ່ສາມາດສືບຄົ້ນໄດ້.
[9]ຂອງປະທານຈາກພຣະເຈົ້າ ເພື່ອໃຫ້ຂ້າພະເຈົ້າເປີດເຜີຍໃຫ້ ຄົນທັງປວງເຫັນແຈ້ງເຖິງແຜນການອັນລັບເລິກ ຂອງພຣະເຈົ້າ
ຄືແຜນການທີ່ຊຶ່ງໄດ້ເຊື່ອງຊ້ອນໄວ້ທຸກຍຸກທຸກສະໄຫມມາແລ້ວໂດຍພຣະເຈົ້າ, ຜູ້ຊົງສ້າງສັພະທຸກສິ່ງ.
[10]ແຜນການນີ້ ເພື່ອໃຫ້ບັນດາຜູ້ຄອບຄອງ ແລະ ຜູ້ມີອຳນາດ ໃນສະຫວັນສະຖານ ໄດ້ຮູ້ເຖິງພຣະສະຕິປັນຍາອັນສັບຊ້ອນ ຂອງພຣະເຈົ້າ
ໂດຍທາງຄຣິສຕະຈັກ.[11]ສິ່ງນີ້ຈະເກີດຕາມແຜນການ ນິຣັນດອນ ຊຶ່ງພຣະອົງຊົງກະທຳສຳເຣັດ ໂດຍທາງ ພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.
[12]ເພາະໃນພຣະຄຣິດເຈົ້ານັ້ນ, ພວກເຮົາສາມາດເຂົ້າມາເຝົ້າໄດ້ ດ້ວຍຄວາມຫມັ້ນໃຈ ເພາະເຫດຄວາມເຊື່ອໃຈໃນພຣະອົງ.[13]ເຫດສະນັ້ນ,
ຂ້າພະເຈົ້າ ຈຶ່ງຂໍຮ້ອງພວກເຈົ້າວ່າ ຢ່າທໍ້ຖອຍໃຈ ຍ້ອນຂ້າພະເຈົ້າຖືກທົນທຸກລຳບາກ ເພື່ອພວກເຈົ້າ, ນັ້ນຄືກຽດຕິຍົດ ຂອງພວກເຈົ້າເອງ.
[14]ເພາະເຫດນີ້ ຂ້າພະເຈົ້າຈຶ່ງຄຸເຂົ່າລົງ ຕໍ່ຫນ້າພຣະບິດາເຈົ້າ.[15]ຜູ້ຊົງເປັນຕົ້ນແບບຂອງການເອີ້ນຊື່ ສຳລັບທຸກໆ ຄອບຄົວໃນສະຫວັນ ແລະ
ເທິງແຜ່ນດິນໂລກ.[16]ຂ້າພະເຈົ້າ ພາວັນນາອະທິຖານ ຂໍພຣະອົງ ຊົງໂຜດກະທຳໃຫ້ພວກທ່ານ ເຂັ້ມແຂງ ຕາມຂະຫນາດຄວາມອຸດົມສົມບູນ
ແຫ່ງພຣະສະຫງ່າຣາສີຂອງພຣະອົງ ດ້ວຍຣິດເດດ ຜ່ານທາງພຣະວິຍານ ຂອງພຣະອົງ, ຜູ້ຊົງສະຖິດພາຍໃນພວກເຈົ້າ.
[17]ຂ້າພະເຈົ້າອະທິຖານ ໃຫ້ພຣະຄຣິດເຈົ້າ ສະຖິດຢູ່ໃນຈິດໃຈຂອງພວກທ່ານ ໂດຍທາງຄວາມເຊື່ອ, ຂ້າພະເຈົ້າອະທິຖານຂໍໃຫ້ວາງຮາກ ແລະ
ປັກຫລັກລົງ ຢ່າງຫມັ້ນຄົງ ໃນຄວາມຮັກຂອງພຣະອົງ.[18]ຂໍໃຫ້ພວກເຈົ້າ ຢູ່ໃນຄວາມຮັກຂອງພຣະອົງ ເພື່ອພວກເຈົ້າຈະໄດ້ເຂົ້າໃຈ,
ພ້ອມກັບຜູ້ເຊື່ອ ທັງປວງວ່າ ແມ່ນຫຍັງ ຄື ຄວາມກວ້າງ, ຄວາມຍາວ, ຄວາມສູງ ແລະ ຄວາມເລິກ ແຫ່ງຄວາມຮັກ ຂອງພຣະຄຣິດເຈົ້າ.[19]ແລະ
ເພື່ອທ່ານຈະເຂົ້າໃຈຄວາມຍິ່ງໃຫ່ຍ ແຫ່ງຄວາມຮັກ ຂອງພຣະຄຣິດເຈົ້າ, ຊຶ່ງເກີນຄວາມຮູ້, ແລະ ເພື່ອເຈົ້າທັງຫລາຍ
ຈະໄດ້ຮັບຄວາມເຕັມບໍຣິບູນ ຂອງພຣະເຈົ້າ.
[20]ບັດນີ້ ແດ່ພຣະອົງ ຜູ້ຊົງຣິດສາມາດກະທຳທຸກສິ່ງໄດ້ຫລວງຫລາຍມະຫາສານ ເກີນກວ່າ ທີ່ພວກເຮົາຈະຂໍ ຫລື ຄິດໄດ້ ຕາມຣິດອຳນາດ
ທີ່ກະທຳກິດຢູ່ພາຍໃນ ຕົວຂອງພວກເຮົາ.[21]ມີແດ່ພຣະອົງໃນຄຣິສຕະຈັກ ແລະ ໃນພຣະເຢຊູຄຣິດເຈົ້າທຸກຍຸກທຸກສະໄຫມ
ຕະຫລອດໄປເປັນນິດເທີ້ນ ອາແມນ.


generated on Tue Jun 17 19:01:42 2025

4 [1]ເຫດສະນັ້ນ, ຂ້າພະເຈົ້າ ໃນຖານະຜູ້ຖືກຄຸກ ເພື່ອອົງພຣະຜູ້ເປັນເຈົ້າ, ຂ້າພະເຈົ້າຈຶ່ງຂໍຮ້ອງພວກທ່ານວ່າ,
ຈົ່ງດຳເນີນໃຫ້ສົມກັບໄດ້ຖືກຊົງເອີ້ນ ຊຶ່ງພວກເຈົ້າເອງໄດ້ຮັບນັ້ນ.[2]ຈົ່ງດຳເນີນຊີວິດດ້ວຍຄວາມຖ່ອມໃຈ ອ່ອນສຸພາບ ແລະ ຄວາມອົດທົນ,
ຈົ່ງຍອມຮັບ ຊຶ່ງກັນແລະກັນ ດ້ວຍຄວາມຮັກ.[3]ເພື່ອຮັກສາຄວາມເປັນນ້ຳຫນຶ່ງໃຈດຽວກັນ ຂອງພຣະວິນຍານ
ໂດຍມີສັນຕິພາບເປັນເຄື່ອງຜູກມັດ.

[4]ມີຮ່າງກາຍດຽວ ແລະ ມີພຣະວິນຍານອົງດຽວ, ເຫມືອນກັບພວກເຈົ້າໄດ້ຊົງເອີ້ນໃຫ້ເຂົ້າມາໃນ ຄວາມເຊື່ອຫມັ້ນ
ທີ່ເຕັມໄປດ້ວຍຄວາມຫວັງດຽວ ໃນການຊົງເອີ້ນ ຂອງພວກທ່ານເທົ່ານັ້ນ.[5]ແລະ ມີອົງພຣະຜູ້ເປັນເຈົ້າອົງດຽວ, ມີຄວາມເຊື່ອດຽວ ແລະ
ມີບັບຕິສະມາດຽວ.[6]ແລະ ມີພຣະເຈົ້າອົງດຽວ ຄືພຣະບິດາເຈົ້າຂອງຄົນ ທັງປວງ ພຣະອົງຊົງຄອບຄອງຢູ່ເຫນືອທຸກສິ່ງ, ຜ່ານທາງທຸກສິ່ງ ແລະ
ຢູ່ໃນທຸກສິ່ງ.
[7]ພວກເຮົາແຕ່ລະຄົນ ໄດ້ຮັບຂອງປະທານຢ່າງຫນຶ່ງຕາມຂະຫນາດຂອງປະທານຂອງພຣະຄຣິດເຈົ້າ.[8]ເຫມືອນທີ່ພຣະຄັມໄດ້ກ່າວເອົາໄວ້ວ່າ,
“ເມື່ອພຣະອົງໄດ້ສະເດັດຂຶ້ນໄປເຖິງທີ່ສູງສຸດແລ້ວ, ໄດ້ຊົງນຳບັນດາ ພວກຊະເລີຍເຂົ້າໄປໃນທີ່ຄຸກ ພຣະອົງໄດ້ປະທານ
ຂອງປະທານຕ່າງໆໃຫ້ແກ່ຜູ້ຄົນ.”
[9]ແມ່ນຫຍັງຄືຄວາມຫມາຍຄຳກ່າວວ່າ, “ພຣະອົງໄດ້ສະເດັດຂຶ້ນເມືອ”, ນອກຈາກວ່າ ການທີ່ພຣະອົງໄດ້ສະເດັດລົງໄປສູ່ເບື້ອງຕ່ຳ
ຂອງແຜ່ນດິນໂລກແລ້ວ?[10]ພຣະອົງຜູ້ສະເດັດລົງໄປນັ້ນ ກໍຄືພຣະອົງຜູ້ທີ່ໄດ້ ສະເດັດຂຶ້ນເມືອສູ່ທີ່ສູງເຫນືອ ຟ້າສະຫວັນທັງປວງ,
ພຣະອົງກະທຳເຊັ່ນນີ້ ເພື່ອພຣະອົງ ຈະຊົງສາມາດເຮັດໃຫ້ທຸກສິ່ງ ບໍຣິບູນໄດ້.
[11]ພຣະຄຣິດເຈົ້າ ໄດ້ມອບຂອງປະທານເຫລົ່ານີ້ ຄືອັກຄະສາວົກ, ເປັນຜູ້ປະກາດພຣະທຳ, ເປັນຜູ້ປະກາດຂ່າວປະເສີດ ແລະ ເປັນສິດຍາພິບານ
ແລະ ຄູສາສະຫນາ.[12]ພຣະອົງກະທຳເພື່ອເສີມສ້າ ງຄົນທີ່ບໍຣິສຸດຂອງພຣະອົງໃຫ້ພ້ອມສຳລັບການງານ ແຫ່ງການເປັນຜູ້ຮັບໃຊ້,
ເພື່ອເສີມສ້າງພຣະກາຍຂອງພຣະຄຣິດເຈົ້າ.[13]ພຣະອົງ ກຳລັງກະທຳສິ່ງນີ້ ເພື່ອສ້າງພຣະກາຍຂອງພຣະອົງ ຈົນກວ່າພວກເຮົາທຸກຄົນ
ຈະບັນລຸເຖິງ ຄວາມເປັນນ້ຳຫນຶ່ງໃຈດຽວກັນ ໃນຄວາມເຊື່ອ ແລະ ໃນຄວາມຮູ້ເຖິງເລື່ອງ ພຣະບຸດຂອງພຣະເຈົ້າ, ແລະ ພວກເຮົາ
ຈະເປັນຄົນຜູ້ໃຫຍ່ເຫມືອນກັນກັບ ຄົນເຫລົ່ານັ້ນ ທີ່ໄດ້ບັນລຸເຖິງຄວາມສົມບູນຂອງພຣະຄຣິດເຈົ້າແລ້ວ.
[14]ທັງນີ້ ພຣະຄຣິດເຈົ້າເສີມສ້າງ ພວກເຮົາ ເພື່ອພວກເຮົາຈະບໍ່ເປັນເຫມືອນ ເດັກນ້ອຍອີກຕໍ່ໄປ ເພື່ອພວກເຮົາຈະບໍ່ຕ້ອງຖືກເຮັດໃຫ້ພັດໄປມາ
ແລະ ຫັນເຫ ໄປຕາມລົມ ແຫ່ງຄຳສັ່ງສອນທຸກຢ່າງ ແລະ ດ້ວຍກົນອຸບາຍຂອງຄົນ ທີ່ສະຫລາດ ໃນການຫລອກຫລວງຂອງເຂົາ.
[15]ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍຄວາມຮັກ, ແລະ ເຕີບໂຕຂຶ້ນທຸກທາງ ເພື່ອເຂົ້າສະຫນິດໃນພຣະອົງ ຜູ້ເປັນກຽດຕິຍົດ ຄື
ພຣະຄຣິດເຈົ້າ.[16]ພຣະຄຣິດເຈົ້າ ເປັນຜູ້ປະສານຮ່າງກາຍທັງສິ້ນ, ແລະ ຮວບຮວມເອົາບັນດາຜູ້ເຊື່ອ ທັງຫລາຍເຂົ້າດ້ວຍຮ່າງກາຍນີ້
ຕິດສະຫນິດ ແລະ ຜູກພັນກັນ, ໂດຍທຸກໆຂໍ້ຕໍ່ ແລະ ເສັ້ນເອັນທຸກເສັ້ນ ເພື່ອທັງຮ່າງກາຍ ທີ່ໄດ້ຈະເຕີບໂຕ ແລະ ສ້າງຕົນເອງຂຶ້ນດ້ວຍຄວາມຮັກ.
[17]ເຫດສະນັ້ນ, ຂ້າພະເຈົ້າ ຈຶ່ງຂໍກ່າວ ແລະ ຊີ້ແຈງໃຫ້ພວກເຈົ້າໃນອົງພຣະຜູ້ເປັນເຈົ້າວ່າ, ພວກເຈົ້າທັງຫລາຍ
ຢ່າດຳເນີນຊີວິດຕາມຢ່າງຄົນຕ່າງຊາດ ທີ່ມີຄວາມຄິດ ອັນໂງ່ອັນຫາປະໂຫຍດບໍ່ໄດ້ອີກຕໍ່ໄປ.[18]ພວກເຂົາຖືກເຮັດໃຫ້ຄວາມຄິດມືດມົນໄປ.
ພວກເຂົາຖືກເຮັດໃຫ້ຫ່າງຈາກ ຊີວິດຂອງພຣະເຈົ້າ ໂດຍຄວາມໂງ່ທີ່ຢູ່ໃນຕົວພວກເຂົາ ອັນເນື່ອງຈາກຫົວໃຈທີ່ແຂງກະດ້າງ.
[19]ພວກເຂົາບໍ່ມີຄວາມຮູ້ສຶກລະອາຍ ແລະ ພວກເຂົາປ່ອຍຕົວ ໄປໃນທາງໂລພາຕັນຫາ, ແລະ ດ້ວຍການປະພຶດທີ່ບໍ່ບໍຣິສຸດຢ່າງເກີນ
ຄວນໃນທຸກແບບ.
[20]ແຕ່ນັ້ນບໍ່ແມ່ນວິທີ ທີ່ພວກເຈົ້າຈະຮຽນຮູ້ ກ່ຽວກັບພຣະຄຣິດເຈົ້າ ໃນລັກສະນະນີ້.[21]ຂ້າພະເຈົ້າຖືວ່າພວກເຈົ້າ ໄດ້ຍິນເລື່ອງພຣະອົງແລ້ວ, ແລະ
ຂ້າພະເຈົ້າຖືວ່າພວກເຈົ້າໄດ້ຮັບຄຳສັ່ງສອນ ເລື່ອງພຣະອົງ, ຕາມຄວາມຈິງ ຊຶ່ງມີຢູ່ໃນພຣະເຢຊູເຈົ້າ.[22]ພວກເຈົ້າຈົ່ງຖອດຖິ້ມ
ສິ່ງທີ່ເປັນໄປຕາມຄວາມປະພຶດເດີມ ຊຶ່ງເປັນຊີວິດເກົ່າ ຂອງພວກເຈົ້າ, ເພາະວ່າຕົວຕົນເກົ່າ ນັ້ນກຳລັງເສື່ອມສູນໄປ
ເນື່ອງຈາກຄວາມປາຖະນາທີ່ຫລອກຫລວງ.
[23]ພວກເຈົ້າໄດ້ຖືກສັ່ງສອນ ເພື່ອຈະໄດ້ຮັບການປ່ຽນແປງໃຫມ່ ທັງໃນຈິດວິນຍານ ແລະ ຄວາມຄິດຂອງພວກເຈົ້າ,[24]ແລະ
ເພື່ອພວກເຈົ້າຈະໄດ້ສວມໃສ່ ຕົວຕົນຄົນໃຫມ່ ຊຶ່ງໄດ້ຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າ ແລະ ໄດ້ຮັບການສ້າງຂຶ້ນໃນຄວາມຊອບທຳ
ແລະ ຄວາມບໍຣິສຸດ ທີ່ແທ້ຈິງ.
[25]ດັ່ງນັ້ນ, ຈົ່ງເລີກໃສ່ໃຈສິ່ງທີ່ບໍ່ຈິງ, ແລະ ພວກເຈົ້າແຕ່ລະຄົນ ຈົ່ງເວົ້າແຕ່ຄວາມຈິງຕໍ່ເພື່ອນບ້ານຂອງຕົນ,
ເພາະພວກເຮົາທຸກຄົນເປັນອະໄວຍະວະຂອງກັນ ແລະ ກັນ.[26]ຄຽດຮ້າຍໄດ້ ແຕ່ຢ່າໃຫ້ຜິດບາບ. ຢ່າປ່ອຍໃຫ້ຕາເວັນຕົກດິນ
ໄປໂດຍທີ່ພວກເຈົ້າຍັງຄຽດຢູ່.[27]ຈົ່ງຢ່າໃຫ້ທີ່ຢູ່ອາໃສແກ່ມານຊົ່ວຮ້າຍ.
[28]ໃຜທີ່ເຄີຍຂີ້ລັກ ກໍຢ່າລັກອີກຕໍ່ໄປ. ແຕ່ໃຫ້ທຸ້ມເທລົງມືເຮັດວຽກຫນັກດີກວ່າ, ທຳງານທີ່ເປັນປະໂຫຍດດ້ວຍເຫື່ອແຮງຂອງເຂົາ,
ເພື່ອເຂົາຈະສາມາດແບ່ງປັນ ໃຫ້ກັບຄົນອື່ນທີ່ຍາກຈົນໄດ້.[29]ຢ່າໃຫ້ມີຄຳຫຍາບຊ້າ ອອກຈາກປາກຂອງພວກເຈົ້າ,
ແຕ່ໃຫ້ໃຊ້ຖ້ອຍຄຳທີ່ເວົ້າອອກມານັ້ນ ເກີດປະໂຫຍດເຫມາະສົມຕໍ່ຄວາມຈຳເປັນ, ເປັນຖ້ອຍຄຳເວົ້າທີ່ໃຫ້ພອນດີ ຕໍ່ຜູ້ກຳລັງໄດ້ຍິນຢູ່ນັ້ນ.[30]ແລະ
ຢ່າເຮັດໃຫ້ພຣະວິນຍານບໍຣິສຸດເຈົ້າ ຂອງພຣະເຈົ້າເສຍພຣະໄທ, ເພາະໂດຍພຣະວິນຍານນັ້ນ ພວກເຈົ້າທັງຫລາຍ ໄດ້ຮັບການປະທັບຕາໄວ້
ເພື່ອວັນແຫ່ງຊົງໄຖ່.
[31]ພວກເຈົ້າຕ້ອງຖິ້ມ ຄວາມຂົມຂື່ນທຸກຢ່າງ, ຄວາມຄຽດຮ້າຍ, ຄວາມຄຽດແຄ້ນ, ການຜິດຖຽງກັນ ແລະ ການກ່າວສຽດສີຕ່າງໆ
ພ້ອມກັບຄວາມຊົ່ວ ໃນທຸກຮູບແບບ.[32]ຈົ່ງມີໃຈເມດຕາຕໍ່ກັນ, ຈົ່ງມີຫົວໃຈອ່ອນສຸພາບ, ຈົ່ງຍົກໂທດໃຫ້ກັນ ແລະກັນ
ເຫມືອນດັ່ງທີ່ພຣະເຈົ້າໃນພຣະຄຣິດເຈົ້າ ໄດ້ຍົກໂທດໃຫ້ແກ່ພວກເຈົ້າ.

 generated on Tue Jun 17 19:01:42 2025

5 1ເພາະສະນັ້ນ ໃນຖານະທີ່ເປັນບຸດທີ່ຮັກຂອງພຣະເຈົ້າ, ຈົ່ງເປັນຜູ້ຕາມແບບພຣະເຈົ້າເທີ້ນ.2ແລະ ຈົ່ງດຳເນີນຢູ່ໃນຄວາມຮັກ,
ເຫມືອນດັ່ງທີ່ພຣະຄຣິດເຈົ້າ ໄດ້ຊົງຮັກເຮົາ ແລະ ຍອມເສຍສະຫລະພຣະອົງເອງໃຫ້ແກ່ເຮົາ, ພຣະອົງເປັນເຄື່ອງບູຊາ ແລະ ເຄື່ອງຖວາຍ
ທີ່ມີກິ່ນຫອມຫວານ ທີ່ພຣະເຈົ້າພໍພຣະໄທ.

3ການກ່າວເຖິງເລື່ອງ ຄວາມປະພຶດຜິດສິນທຳທາງເພດ, ຄວາມບໍ່ບໍຣິສຸດ, ຫລືຄວາມໂລພາຕັນຫາໃດໆ,
ຢ່າໃຫ້ມີຂື້ນທ່າມກາງພວກເຈົ້າເປັນເດັດຂາດ ເພາະສິ່ງເຫລົ່ານີ້ ບໍ່ສົມຄວນກັບເປັນຄົນບໍຣິສຸດ ຂອງພຣະເຈົ້າ.4ທັງຢ່າກ່າວຄຳຫຍາບຊ້າ,
ເລື່ອງບໍ່ມີແກ່ນສານ, ຫລື ເວົ້າຕະຫລົກຫລິ້ນ ຊຶ່ງເປັນການບໍ່ສົມຄວນ, ແຕ່ໃນທາງກັບກັນ ຄວນຈະເຕັມໄປດ້ວຍການຂອບພຣະຄຸນ.
5ເຈົ້າຈົ່ງຮູ້ແນ່ວ່າ ຜູ້ທີ່ຫລິ້ນຊູ້, ຄົນທີ່ບໍ່ບໍຣິສຸດ ຫລື ຜູ້ທີ່ໃຈໂລບ, ຂາບໄຫວ້ຮູບເຄົາຣົບ ຈະບໍ່ມີສິດໄດ້ຮັບມໍລະດົກ ໃນອານາຈັກ
ຂອງພຣະຄຣິດເຈົ້າ ແລະ ຂອງພຣະເຈົ້າ.6ຢ່າໃຫ້ຜູ້ໃດຫລອກລວງພວກເຈົ້າ ດ້ວຍຄຳເວົ້າ ອັນໄຮ້ປະໂຫຍດ ເພາະສິ່ງເຫລົ່ານີ້
ພຣະເຈົ້າຊົງຄຽດຮ້າຍ ຄົນທີ່ບໍ່ເຊື່ອຟັງພຣະອົງ.7ດັ່ງນັ້ນ, ຢ່າໄປມີສ່ວນຮ່ວມໃດໆ ກັບຄົນເຫລົ່ານີ້ເລີຍ.
8ເມື່ອກ່ອນ ພວກເຈົ້າເຄີຍຢູ່ໃນຄວາມມືດ, ແຕ່ຕອນນີ້ພວກເຈົ້າໄດ້ ກາຍເປັນຄວາມສະຫວ່າງ ໃນອົງພຣະຜູ້ເປັນເຈົ້າແລ້ວ. ດັ່ງນັ້ນ,
ຈົ່ງດຳເນີນຢ່າງບຸດ ຂອງຄວາມສະຫວ່າງ.9(ດ້ວຍວ່າ, ຜົນຂອງຄວາມສະຫວ່າງ ປະກອບດ້ວຍຄຸນຄວາມດີ, ຄວາມຊອບທັມ ແລະ
ຄວາມຈິງທຸກປະການ)10ແລະ ຈົ່ງຄົ້ນຫາສິ່ງໃດ ເປັນທີ່ພໍພຣະໄທ ຂອງອົງພຣະຜູ້ເປັນເຈົ້າ.11ກັບການກະທຳ ຂອງຄວາມມືດ
ອັນບໍ່ມີປະໂຫຍດຫຍັງ ແຕ່ໃນທາງກັບກັນ ຈົ່ງເປີດເຜີຍການກະທຳ ເຫລົ່ານັ້ນ ໃຫ້ປະກົດ.12ເພາະວ່າກິຈະການຂອງຄວາມມືດ
ເຫລົ່ານີ້ທີ່ພວກເຂົາເຮັດໃນທີ່ລັບ ແມ່ນແຕ່ຈະເວົ້າເຖິງກໍຍັງເປັນການຫນ້າອາຍແລ້ວ.
13ແຕ່ທຸກສິ່ງເມື່ອຖືກເປີດເຜີຍອອກມາໂດຍຄວາມສະຫວ່າງ, ກໍເທົ່າກັບ ເຮັດໃຫ້ເປັນທີ່ປາກົດແຈ້ງ.14ເພາະທຸກສິ່ງທີ່ເປີດເຜີຍ
ກໍຢູ່ໃນຄວາມສະຫວ່າງ, ສະນັ້ນຈຶ່ງມີຄຳກ່າວວ່າ “ຈົ່ງຕື່ນຂື້ນຜູ້ທີ່ນອນຫລັບເອີຍ, ແລະ ຈົ່ງຟື້ນຂື້ນມາຈາກ ຄວາມຕາຍ ແລະ ອົງພຣະຄຣິດເຈົ້າ
ຈະສ່ອງສະຫວ່າງໃສ່ເຈົ້າ.”
15ດັ່ງນັ້ນ ຈົ່ງລະວັງໃນການດຳເນີນຊີວິດ ຂອງພວກເຈົ້າ- ຢ່າເປັນໃຫ້ເຫມືອນ ຄົນໂງ່ບໍ່ມີປັນຍາ ແຕ່ໃຫ້ເປັນເຫມືອນມີປັນຍາ.
16ຈົ່ງໃຊ້ເວລາໃຫ້ເປັນປະໂຫຍດ ເພາະທຸກວັນນີ້ເປັນເວລາແຫ່ງຄວາມຊົ່ວຮ້າຍ.17ຢ່າເປັນຄົນໂງ່ຈ້າ, ແຕ່ຈົ່ງເຂົ້າໃຈເຖີດວ່າ ສິ່ງໃດຄືນ້ຳພຣະໄທ
ຂອງພຣະຜູ້ເປັນເຈົ້າ.
18ແລະ ຢ່າເມົາເຫລົ້າແວງ, ຊຶ່ງພາໃຫ້ເສັຍຄົນ ແຕ່ຈົ່ງເຕັມລົ້ນດ້ວຍພຣະວິນຍານບໍຣິສຸດເຈົ້າ.19ຈົ່ງສົນທະນາກັນດ້ວຍ ບົດເພງສັນຣະເສີນ ແລະ
ບົດເພງຝ່າຍພຣະວິນຍານ, ຈົ່ງຮ້ອງເພງສັນຣະເສີນຖວາຍແດ່ອົງພຣະຜູ້ເປັນເຈົ້າ ດ້ວຍໃຈຂອງພວກເຈົ້າ.20ຈົ່ງໂມທະນາ
ຂອບພຣະຄຸນໃນທຸກໆສິ່ງຢູ່ສະຫມີ, ໂດຍພຣະນາມ ຂອງອົງພຣະເຢຊູຄຣິດເຈົ້າ ແດ່ພຣະເຈົ້າພຣະບິດາ.21ຈົ່ງຍອມຟັງ ຊຶ່ງກັນແລະກັນ
ດ້ວຍຄວາມຢຳເກງໃນອົງພຣະຄຣິດເຈົ້າ.
22ຝ່າຍເມຍ, ຈົ່ງຍອມອ່ອນນ້ອມ ຕໍ່ຜົວຂອງຕົນ ເຫມືອນດັ່ງທີ່ຍອມອ່ອນນ້ອມ ຕໍ່ ອົງພຣະຜູ້ເປັນເຈົ້າ.23ເພາະວ່າ ຜົວເປັນຫົວ ຂອງເມຍ
ເຫມືອນພຣະຄຣິດເຈົ້າ ຊຶ່ງເປັນປະມຸກ ຂອງຄຣິສຕະຈັກ, ແລະ ພຣະຄຣິດເຈົ້າ ພຣະອົງເອງເປັນພຣະຜູ້ຊ່ວຍ.24ແຕ່ເຫມືອນດັ່ງທີ່ຄຣິສຕະຈັກ
ຢູ່ໃຕ້ພຣະຄຣິດເຈົ້າສັນໃດ, ກໍໃຫ້ເມຍຄວນຍອມອ່ອນນ້ອມ ຕໍ່ຜົວຂອງຕົນໃນທຸກສິ່ງສັນນັ້ນ.
25ຝ່າຍຜົວ, ຈົ່ງຮັກເມຍຂອງຕົນ, ເຫມືອນດັ່ງທີ່ພຣະຄຣິດເຈົ້າຊົງຮັກ ຄຣິສຕະຈັກ ແລະ ຊົງສະຫລະພຣະອົງເອງ ເພື່ອຄຣິສຕະຈັກ.
26ພຣະອົງຊົງເຮັດເຊັ່ນນີ້ ເພື່ອໃຫ້ຄຣິສຕະຈັກບໍຣິສຸດ, ເພາະພຣະອົງ ຊົງຊຳລະດ້ວຍນ້ຳ ກັບດ້ວຍຖ້ອຍຄຳ.27ເພື່ອພຣະອົງນັ້ນ
ຈະໄດ້ຮັບຄຣິສຕະຈັກ ທີ່ມີສະຫງ່າຣາສີບໍ່ມີຈຸດດ່າງພ້ອຍ ຫລື ຮອຍຫ່ຽວແຫ້ງ ແລະ ມົນທິນໃດໆ ແຕ່ບໍຣິສຸດ ແລະ ບໍ່ມີຕຳຫນິ.
28ໃນທຳນອງດຽວກັນ, ຜົວຄວນຮັກເມຍຂອງຕົນ ເຫມືອນດັ່ງຮັກຮ່າງກາຍຂອງຕົນເອງ. ຊາຍໃດ ທີ່ຮັກເມັຍຂອງຕົນ ຊາຍນັ້ນກໍຮັກຕົນເອງ.
29ເພາະບໍ່ມີຜູ້ໃດ ທີ່ກຽດຊັງຮ່າງກາຍຂອງຕົນເອງແຕ່ເຂົາຈະບຳລຸງລ້ຽງ ແລະ ຖະນຸຖະຫນອມຮ່າງກາຍຂອງເຂົາ ເຫມືອນດັ່ງທີ່
ພຣະຄຣິດເຈົ້າຊົງຮັກຄຣິສຕະຈັກ.30ພວກເຮົາເປັນ ອະໄວຍະວະໃນພຣະກາຍຂອງພຣະອົງ.
31“ດ້ວຍເຫດນີ້ ຜູ້ຊາຍຈຶ່ງຈະລາຈາກພໍ່ແມ່ຂອງຕົນ ໄປຜູກພັນຢູ່ກັບເມັຍ, ແລະ ເຂົາທັງສອງ ຈະເປັນເນື້ອກາຍດຽວກັນ.”32ເລື່ອງນີ້ເປັນຄວາມຈິງ
ຍິ່ງໃຫຍ່ທີ່ເລິກລັບຢູ່ ແຕ່ຂ້າພະເຈົ້າກຳລັງ ຫມາຍເຖິງພຣະຄຣິດເຈົ້າ ກັບຄຣິສຕະຈັກ.33ເຖິງຢ່າງໃດກໍດີ, ຜົວທຸກຄົນຈົ່ງຮັກເມັຍຂອງຕົນ
ເຫມືອນດັ່ງຮັກຕົນເອງ ແລະ ເມັຍທຸກຄົນຈົ່ງເຄົາຣົບຢຳເກງຜົວຂອງຕົນ.

 generated on Tue Jun 17 19:01:42 2025

6 [1]ຝ່າຍບຸດທັງຫລາຍ, ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ ໃນອົງພຣະຜູ້ເປັນເຈົ້າ, ເພາະເຮັດແນວນັ້ນເປັນການຖືກຕ້ອງ.[2]"ຈົ່ງນັບຖືບິດາ
ມານດາຂອງຕົນ" (ຊຶ່ງເປັນກົດບັນຍັດໃນຂໍ້ທຳອິດກັບພຣະສັນຍາໄວ້).[3]"ເພື່ອເຈົ້າຈະຢູ່ເຢັນເປັນສຸກ ແລະ ມີອາຍຸຫມັ້ນຍືນໃນດິນແດນນີ້."

[4]ຝ່າຍພໍ່, ຢ່າເຮັດໃຫ້ລູກຂອງຕົນ ຂັດເຄືອງໃຈ. ແຕ່ຈົ່ງອົບຮົມສັ່ງສອນ ພວກເຂົາ ຕາມລະບຽບ ແລະ ຫລັກຄຳສັ່ງສອນທຸກຢ່າງ
ຂອງອົງພຣະຜູ້ເປັນເຈົ້າ.
[5]ຝ່າຍຜູ້ທີ່ເປັນຄົນຮັບໃຊ້, ຈົ່ງຍອມເຊື່ອຟັງເຈົ້ານາຍຝ່າຍໂລກ ຂອງພວກເຈົ້າ ດ້ວຍຄວາມເຄົາຣົບ ຢ່າງເລິກເຊິ່ງ ແລະ ດ້ວຍຄວາມຢຳເກງ,
ໃນຄວາມຈິງໃຈ ທີ່ຊື່ຕົງ ຊຶ່ງເຊື່ອຟັງ ເຈົ້ານາຍຂອງຕົນ ເຫມືອນເຊື່ອຟັງ ພຣະຄຣິດເຈົ້າ.[6]ຢ່າສູ່ເຮັດພຽງແຕ່ ເມື່ອຢູ່ຕໍ່ຫນ້າເຈົ້ານາຍ
ເພາະຢາກໃຫ້ຖືກໃຈເພິ່ນ. ແຕ່ຈົ່ງເຮັດເຫມືອນດັ່ງເປັນຜູ້ຮັບໃຊ້ ຂອງພຣະຄຣິດເຈົ້າ ເຮັດຕາມນ້ຳພຣະໄທຂອງພຣະເຈົ້າ ດ້ວຍຄວາມເຕັມໃຈ.
[7]ຈົ່ງຮັບໃຊ້ດ້ວຍສຸດໃຈຂອງພວກເຈົ້າ, ໃຫ້ເຫມືອນກັບວ່າ ພວກເຈົ້າໄດ້ຮັບໃຊ້ອົງພຣະຜູ້ເປັນເຈົ້າ ແລະ ບໍ່ແມ່ນຮັບໃຊ້ມະນຸດ.[8]ຈົ່ງຈົດຈຳໄວ້ວ່າ
ຄວາມດີທຸກຢ່າງທີ່ແຕ່ລະຄົນເຮັດໄປນັ້ນ ຈະເປັນເຫດໃຫ້ເຂົາໄດ້ຮັບບຳເຫນັດຈາກພຣະຜູ້ເປັນເຈົ້າ ບໍ່ວ່າຈະເປັນຂ້ອຍໃຊ້ ຫລື ບໍ່ເປັນກໍຕາມ.
[9]ຝ່າຍພວກເປັນເຈົ້ານາຍ, ກໍຈົ່ງປະພຶດຕໍ່ຂ້ອຍໃຊ້ຂອງຕົນ ໃນທຳນອງດຽວກັນ. ຢ່າຂູ່ເຂັນພວກເຂົາ.
ພວກເຈົ້າຊາບວ່າພຣະອົງຜູ້ເປັນທັງເຈົ້ານາຍຂອງພວກເຂົາ ແລະ ຂອງພວກເຈົ້າ ຊົງປະທັບຢູ່ໃນສະຫວັນ, ພວກເຈົ້າກໍຊາບວ່າພຣະອົງ
ບໍ່ຊົງລຳອຽງເຂົ້າຂ້າງໃຜເລີຍ.
[10]ສຸດທ້າຍນີ້, ຈົ່ງມີກຳລັງເພີ່ມຂຶ້ນ ໃນອົງພຣະຜູ້ເປັນເຈົ້າ ແລະ ດ້ວຍພະລັງ ແຫ່ງອະນຸພາບຂອງພຣະອົງ.[11]ຈົ່ງສວມ ຍຸດທະພັນ
ຂອງພຣະເຈົ້າໃຫ້ຄົບຊຸດ, ເພື່ອວ່າ ພວກເຈົ້າຈະສາມາດ ຢືນຢັດຕໍ່ສູ້ກັບກົນອຸບາຍ ຂອງມານຮ້າຍໄດ້.
[12]ເພາະສົງຄາມຂອງພວກເຮົານັ້ນ ບໍ່ແມ່ນການຕໍ່ສູ້ກັບມະນຸດ ແລະ ທີ່ມີເລືອດເນື້ອ. ແຕ່ກົງກັນຂ້າມ, ມັນເປັນການຕໍ່ສູ້ກັບອຳນາດປົກຄອງຕ່າງໆ,
ອຳນາດຂອງຝ່າຍວິນຍານ ແລະ ຜູ້ປົກຄອງໃນຄວາມມືດອັນຊົ່ວຮ້າຍ, ຕໍ່ສູ້ກັບເຫລົ່າວິນຍານຊົ່ວຮ້າຍ ໃນສະຖານຟ້າອາກາດ.[13]ເຫດສະນັ້ນ
ຈົ່ງໃສ່ຍຸດທະພັນ ຂອງພຣະເຈົ້າໃຫ້ຄົບຊຸດ, ເພື່ອພວກເຈົ້າທັງຫລາຍ ຈະສາມາດຢຶດຫມັ້ນຄົງໄດ້ ໃນການຕໍ່ສູ້ກັບສິ່ງຊົ່ວຮ້າຍ
ໃນຍຸກທີ່ຊົ່ວຮ້າຍນີ້. ຫລັງຈາກພວກເຈົ້າເຮັດທຸກສິ່ງຄົບຖ້ວນແລ້ວ ພວກເຈົ້າຈະໄດ້ຢູ່ຢ່າງຫມັ້ນຄົງໄດ້.
[14]ເຫດສະນັ້ນ, ຈົ່ງຢຶດຫມັ້ນ, ຈົ່ງເຮັດສິ່ງນີ້ ຫລັງຈາກທີ່ພວກເຈົ້າໄດ້ຄາດແອວ ແຫ່ງຄວາມຈິງ ແລະ ສວມເສື້ອເກາະແຫ່ງຄວາມຊອບທັມແລ້ວ.
[15]ຈົ່ງເຮັດສິ່ງນີ້ຫລັງຈາກທີ່ພວກເຈົ້າ ໄດ້ໃສ່ເກີບ ດ້ວຍການມີໃຈພ້ອມ ທີ່ຈະປະກາດຂ່າວປະເສີດແຫ່ງສັນຕິສຸກແລ້ວ.
[16]ຈົ່ງຍົກເອົາເຂນແຫ່ງຄວາມເຊື່ອ ເພື່ອພວກເຈົ້າ ສາມາດ ດັບ ລູກສອນໄຟຈາກມານຊົ່ວຮ້າຍໄດ້
[17]ແລະ ຈົ່ງຮັບເອົາຫມວກແຫ່ງຄວາມລອດ ແລະ ດາບແຫ່ງພຣະວິນຍານ, ຊຶ່ງກໍຄືພຣະທັມຂອງພຣະເຈົ້າ.[18]ດ້ວຍທຸກຄຳພາວັນນາອະທິຖານ
ແລະ ວິງວອນ ໃນພຣະວິນຍານໃນທຸກເວລາດ້ວຍການອະທິຖານ. ແລະ ຄຳຂໍທຸກຢ່າງດ້ວຍທ່າທີເຊັ່ນນີ້ໃນໃຈ,
ໃຫ້ເຝົ້າຣະວັງຢູ່ສະເຫມີດ້ວຍຄວາມພຽນພະຍາຍາມ, ແລະ ດ້ວຍການພາວັນນາອະທິຖານ ເພື່ອຜູ້ເຊື່ອທຸກຄົນ.
[19]ແລະ ຈົ່ງພາວັນນາອະທິຖານ ເພື່ອຂ້າພະເຈົ້າດ້ວຍ, ເພື່ອໃຫ້ມີຖ້ອຍຄຳສັ່ງສອນ ທຸກຄັ້ງທີ່ຂ້າພະເຈົ້າອອກປາກ.
ຈົ່ງອະທິຖານເພື່ອໃຫ້ຂ້າພະເຈົ້າ ກ້າຫານໃນການກ່າວຂ່າວປະເສີດ,[20]ຍ້ອນຂ່າວປະເສີດນີ້ແຫລະ ຂ້າພະເຈົ້າຈຶ່ງກາຍເປັນຣາຊທູດ ຜູ້ຕິດໂສ້ຢູ່,
ເພື່ອຂ້າພະເຈົ້າໄດ້ມີໃຈກ້າຫານ ຈະປະກາດຂ່າວປະເສີດນັ້ນ, ຕາມສົມຄວນທີ່ຂ້າພະເຈົ້າຈະກ່າວ.
[21]ຕີຂີໂກ, ພີ່ນ້ອງທີ່ຮັກເອີຍ ແລະ ແຕ່ພວກເຈົ້າຈະໄດ້ຮັບຮູ້ເຖິງຄວາມເປັນຢູ່ ແລະ ສະຖານະການຂອງຂ້າພະເຈົ້າ ແລະ ຜູ້ຮັບໃຊ້ທີ່ສັດຊື່
ໃນອົງພຣະຜູ້ເປັນເຈົ້າ ຈະເລົ່າເລື່ອງທັງໝົດ ກ່ຽວກັບຂ້າພະເຈົ້າ ສູ່ພວກເຈົ້າຟັງທຸກຢ່າງ.[22]ສະນັ້ນຂ້າພະເຈົ້າ ຈຶ່ງໃຊ້ລາວມາຫາພວກເຈົ້າ
ເພື່ອແຈ້ງຈຸດປະສົງຂໍ້ນີ້, ຄືເພື່ອໃຫ້ໄດ້ຮູ້ເຖິງຂ່າວຄາວ ຂອງພວກເຂົາ ແລະ ໃຫ້ເຂົາຫນູນໃຈພວກເຈົ້າດ້ວຍ.
[23]ຂໍໃຫ້ສັນຕິສຸກ ຈົ່ງມີແກ່ພີ່ນ້ອງທຸກຄົນ, ພ້ອມທັງຄວາມຮັກ ແລະ ຄວາມເຊື່ອ ຈາກພຣະເຈົ້າພຣະບິດາເຈົ້າ ແລະ
ອົງພຣະເຢຊູຄຣິດເຈົ້າດ້ວຍເທີ້ນ.[24]ຂໍໃຫ້ ພຣະຄຸນຈົ່ງສະຖິດຢູ່ນຳທຸກຄົນທີ່ຮັກ ໃນອົງພຣະເຢຊູຄຣິດເຈົ້າ
ຂອງພວກເຮົາດ້ວຍຄວາມຮັກທີ່ບໍ່ມີວັນເສື່ອມສູນ.

# ຟີລິບປອຍ

1 [1]ໂປໂລ ແລະ ຕີໂມທຽວ, ຜູ້ຮັບໃຊ້ ຂອງພຣະເຢຊູຄຣິດເຈົ້າ, ເຖິງໄພ່ພົນທຸກຄົນ ທີ່ຖືກແຍກໄວ້ໃນພຣະເຢຊູຄຣິດເຈົ້າ
ໃນເມືອງຟີລິບປອຍພ້ອມກັບບັນດາຜູ້ປົກຄອງ ແລະ ຜູ້ດູແລ.[2]ຂໍໃຫ້ພຣະຄຸນ ແລະ ສັນຕິສຸກ ຈາກພຣະບິດາເຈົ້າຂອງເຮົາ ແລະ
ຈາກອົງພຣະເຢຊູຄຣິດເຈົ້າ ຢູ່ກັບທ່ານທັງຫຼາຍເທີ້ນ.

[3]ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າ ທຸກຄັ້ງເມື່ອລະນຶກເຖິງທ່ານທັງຫລາຍ[4]ເພື່ອ ພວກທ່ານທັງຫລາຍຢູ່ສະເຫມີ ຂ້າພຣະເຈົ້າອະທິຖານ
ດ້ວຍຄວາມຊື່ນຊົມຍິນດີ,[5]ທີ່ພວກທ່ານ ໄດ້ຮ່ວມກັນປະກາດຂ່າວປະເສີດ ຕັ້ງແຕ່ຕົ້ນຈົນເຖິງບັດນີ້.[6]ຂ້າພະເຈົ້າແນ່ໃຈໃນເລື່ອງນີ້ວ່າ ພຣະອົງ
ຜູ້ໄດ້ຊົງ ຕັ້ງຕົ້ນການດີໄວ້ໃນ ພວກທ່ານແລ້ວ ຈະຊົງກະທຳຕໍ່ໄປໃຫ້ສຳເລັດຈົນເຖິງວັນຂອງພຣະເຢຊູຄຣິດເຈົ້າ.
[7]ທີ່ຂ້າພະເຈົ້າຮູ້ສຶກແບບນີ້ກັບພວກ ທ່ານທັງຫລາຍ ຈຶ່ງເປັນສິ່ງ ທີ່ຖືກຕ້ອງເພາະພວກທ່ານຢູ່ໃນຫົວໃຈຂອງຂ້າພະເຈົ້າ
ພວກທ່ານທັງຫມົດໄດ້ມີສ່ວນຮ່ວມໃນພຣະຄຸນ ທັງໃນການຖືກຈຳຈ່ອງ ຂອງຂ້າພະເຈົ້າ ແລະ ໃນການປົກປ້ອງແລະ
ຮັບປະກັນຂ່າວປະເສີດນີ້[8]ເພາະພຣະເຈົ້າຊົງ ເປັນພະຍານ ວ່າຂ້າພະເຈົ້າປາຖະຫນາຢາກພົບພວກທ່ານທັງຫລາຍດ້ວຍຄວາມຮັກທີ່ເລິກເຊິ່ງ
ຂອງພຣະເຢຊູຄຣິດເຈົ້າ.
[9]ຂ້າພະເຈົ້າອະທິຖານດັ່ງນີ້ ຂໍໃຫ້ຄວາມຮັກ ຂອງພວກທ່ານຈະເລີນໃຫຍ່ຂຶ້ນ ໃນຄວາມຮູ້ ແລະ ໃນຄວາມເຂົ້າໃຈທັງຫມົດ,
[10]ຂ້າພະເຈົ້າອະທິຖານເພື່ອສິ່ງນີ້ ເພື່ອ ພວກທ່ານຈະໄດ້ທົດສອບ ແລະ ເລືອກເອົາ ສິ່ງດີທີ່ສຸດໄວ້ ຂ້າພະເຈົ້າອະທິຖານເພື່ອສິ່ງນີ້
ເພື່ອພວກທ່ານຈະມີ ຄວາມຈິງໃຈ ແລະ ບໍ່ມີທີ່ຕິຕຽນໄດ້ ໃນວັນຂອງພຣະເຢຊູຄຣິດເຈົ້າ.[11]ເພື່ອໃຫ້ທ່ານເຕັມລົ້ນໄປດ້ວຍຜົນແຫ່ງຄວາມຊອບທຳ
ທີ່ຜ່ານມາທາງພຣະເຢຊູຄຣິດເຈົ້າ ເພື່ອເປັນທີ່ຖວາຍກຽດ ແລະ ສັນລະເສີນພຣະເຈົ້າ.

 generated on Tue Jun 17 19:01:42 2025

[12]ພີ່ນ້ອງທີ່ຮັກ, ຂ້າພະເຈົ້າຢາກໃຫ້ ທ່ານຮູ້ວ່າ ສິ່ງທີ່ໄດ້ ເກີດຂຶ້ນກັບຂ້າພະເຈົ້າ ໄດ້ເຮັດໃຫ້ຂ່າວປະເສີດແຜ່ຂະຫຍາຍອອກໄປຢ່າງຫຼວງຫຼາຍ.
[13]ຜົນທີ່ປະກົດຂຶ້ນໃຫ້ເຫັນ ກໍຄື ພວກທະຫານທຸກຄົນ ແລະ ຜູ້ຄຸມຂັງ ພ້ອມກັບຄົນອື່ນໆທັງໝົດ ໄດ້ຮູ້ເລື່ອງຂອງເຮົາວ່າ
ເຮົາຖືກຈໍາຈ່ອງຍ້ອນເປັນຜູ້ຮັບໃຊ້ ຂອງພຣະເຢຊູຄຣິດເຈົ້າ.[14]ພີ່ນ້ອງສ່ວນໃຫຍ່ ໃນ ອົງພຣະຜູ້ເປັນເຈົ້າ ມີແຮງຈູງໃຈ ຫຼາຍຂຶ້ນ
ອັນເນື່ອງມາຈາກການຖືກຈໍາຈ່ອງຂອງຂ້າພະເຈົ້າ ທີ່ຈະມີໃຈກ້າຫານ ກ່າວພຣະຄໍາ ຂອງພຣະເຈົ້າຢ່າງບໍ່ຢ້ານກົວ.
[15]ບາງຄົນປະກາດ ພຣະຄໍາຂອງພຣະເຈົ້າດ້ວຍໃຈອິດສາ ແລະ ຜິດຖຽງກັນ, ແລະ ບາງຄົນກໍປະກາດດ້ວຍໃຈປາຖະໜາດີ.
[16]ຜູ້ທີ່ປະກາດພຣະເຢຊູຄຣິດເຈົ້າ ດ້ວຍຄວາມຮັກ, ເພາະຮູ້ວ່າ ຂ້າພະເຈົ້າຖືກຈໍາຈ່ອງເພາະປົກປ້ອງຂ່າວປະເສີດ.[17]ສ່ວນຄົນອື່ນ
ທີ່ປະກາດພຣະເຢຊູຄຣິດເຈົ້າ ດ້ວຍແຮງຈູງໃຈທີ່ເຫັນແກ່ຕົວ, ບໍ່ສັດຊື່ ແລະ ອວດອ້າງ.
ພວກເຂົາຫວັງຈະໃຫ້ຂ້າພະເຈົ້າເດືອດຮ້ອນໃນຂະນະທີ່ຂ້າພະເຈົ້າຖືກຈໍາຈ່ອງຢູ່.
[18]ຖ້າຢ່າງນັ້ນແລ້ວ ຈະເປັນປະການໃດ? ບໍ່ວ່າຈະດ້ວຍວິທີໃດກໍຕາມ, ບໍ່ວ່າເຂົາຈະແກ້ງເຮັດ ຫລື ເຮັດດ້ວຍຄວາມຈິງ, ພຣະເຢຊ
ູຄຣິດເຈົ້າກໍໄດ້ຖືກປະກາດອອກໄປ, ແລະ ດ້ວຍເຫດນີ້ຂ້າພຣະເຈົ້າຈຶ່ງມີຄວາມຊື່ນຊົມຍິນດີ. ແລະ ຂ້າພະເຈົ້າກໍຍິນດີຕໍ່ໄປ,
[19]ເພາະຂ້າພະເຈົ້າຮູ້ວ່າ ສິ່ງນີ້ຈະສົ່ງໃຫ້ຂ້າພະເຈົ້າໄດ້ຮັບການປົດປ່ອຍ ສິ່ງນີ້ຈະເກີດຂຶ້ນເພາະຄໍາອະທິຖານຂອງພວກທ່ານ ແລະ
ເພາະການຊ່ວຍເຫຼືອຂອງພຣະວິນຍານບໍລິສຸດຂອງພຣະເຢຊູຄຣິດເຈົ້າ.
[20]ຖ້າເບິ່ງຈາກຄວາມຫວັງ ອັນເຕັມໄປດ້ວຍຄວາມຫມັ້ນໃຈ ແລະ ຄວາມເຊື່ອຫມັ້ນຂອງຂ້າພະເຈົ້າແລ້ວ, ຂ້າພະເຈົ້າຈະບໍ່ມີຄວາມລະອາຍ,
ແຕ່ໂດຍຄວາມກ້າຫານທັງຫມົດຢ່າງທີ່ເຄີຍມີມາຢູ່ສະເຫມີ ແລະ ເຊັ່ນດຽວກັນ, ພຣະເຢຊູຄຣິດເຈົ້າ ຈະໄດ້ຮັບກຽດ
ໃນຮ່າງກາຍຂອງຂ້າພະເຈົ້າ, ບໍ່ວ່າຈະມີຊີວິດຢູ່ ຫລື ຕາຍກໍຕາມ.[21]ການມີຊີວິດຢູ່ກໍເພື່ອພຣະເຢຊູຄຣິດເຈົ້າ ແລະ ການຕາຍກໍເປັນປະໂຫຍດ.
[22]ແຕ່ຖ້າຂ້າພະເຈົ້າຍັງມີຊີວິດຢູ່ໃນຮ່າງກາຍນີ້, ກໍໃຫ້ເກີດຜົນຈາກການເຮັດວຽກຫນັກຂອງຂ້າພະເຈົ້າ, ແລ້ວຂ້າພະເຈົ້າກໍບໍ່ຮູ້ວ່າ
ຈະເລືອກເອົາທາງໃດດີ?.[23]ເພາະຂ້າພະເຈົ້າລໍາບາກໃຈທີ່ຈະເລືອກເອົາຢ່າງໃດຢ່າງຫນຶ່ງ. ຂ້າພະເຈົ້າປາຖະໜາ ທີ່ຈະຈາກໄປຢູ່ກັບພຣະເຢຊ
ູຄຣິດເຈົ້າ ຊຶ່ງທີ່ປະເສີດຫລາຍກວ່າ,[24]ແຕ່ການທີ່ຂ້າພະເຈົ້າຍັງມີຊີວິດຢູ່ໃນຮ່າງກາຍ
ນີ້ກໍເປັນສິ່ງຈໍາເປັນເພື່ອເຫັນແກ່ປະໂຫຍດຂອງພວກທ່ານຫລາຍກວ່າ.
[25]ເນື່ອງຈາກຂ້າພະເຈົ້າຫມັ້ນໃຈ ໃນເລື່ອງນີ້, ຂ້າພະເຈົ້າຮູ້ວ່າຍັງຄົງຢູ່ ແລະ ສືບຕໍ່ຢູ່ກັບທ່ານທັງຫລາຍຕໍ່ໄປອີກ, ເພື່ອຄວາມກ້າວຫນ້າ ແລະ
ຄວາມຊື່ນຊົມຍິນດີໃນຄວາມເຊື່ອຂອງພວກທ່ານ,[26]ດັ່ງນັ້ນໃນເຮົາ ຜົນກໍຄືຄວາມຊື່ນຊົມຍິນດີຂອງພວກທ່ານຈະທະວີຫລາຍຂຶ້ນ
ໃນພຣະເຢຊູຄຣິດເຈົ້າ ໃນເວລາຂ້າພະເຈົ້າມາຫາທ່ານອີກ.[27]ຂໍພຽງດໍາເນີນຊີວິດ ໃຫ້ສົມກັບຂ່າວປະເສີດ ຂອງພຣະເຢຊູຄຣິດເຈົ້າ,
ຈົ່ງກະທໍາເຊັ່ນນີ້ເພື່ອວ່າ ຖ້າຂ້າພະເຈົ້າມາຫາພວກທ່ານ ຫລື ບໍ່ມາກໍຕາມ, ຂ້າພະເຈົ້າກໍຈະໄດ້ຍິນວ່າພວກທ່ານຕັ້ງໝັ້ນຄົງຢູ່
ໃນວິນຍານດຽວກັນ, ຂ້າພະເຈົ້າຢາກໄດ້ຍິນຂ່າວວ່າພວກທ່ານໄດ້ຮ່ວມກັນຕໍ່ສູ້ ດ້ວຍຈິດໃຈດຽວກັນ ເພື່ອຄວາມເຊື່ອໃນຂ່າວປະເສີດ.
[28]ຢ່າຢ້ານໃນສິ່ງທີ່ສັດຕູຂອງພວກທ່ານໄດ້ເຮັດ. ສິ່ງນີ້ເປັນເຄື່ອງຫມາຍແຫ່ງການຖືກທໍາລາຍຂອງພວກເຂົາ, ແຕ່ສໍາລັບພວກທ່ານ
ຄືເປັນເຄື່ອງຫມາຍແຫ່ງຄວາມລອດພົ້ນ - ແລະ ສິ່ງນີ້ແມ່ນມາຈາກພຣະເຈົ້າ.[29]ສິ່ງນີ້ໄດ້ປະທານໃຫ້ແກ່ພວກທ່ານ,
ເພື່ອເຫັນແກ່ພຣະເຢຊູຄຣິດເຈົ້າ, ບໍ່ພຽງແຕ່ໃຫ້ເຊື່ອໃນພຣະອົງເທົ່ານັ້ນ, ແຕ່ໃຫ້ຍອມທົນທຸກ ເພື່ອພຣະອົງດ້ວຍ.[30]ເພາະທ່ານກໍມີ
ການຕໍ່ສູ້ຢ່າງດຽວກັບທີ່ພວກທ່ານໄດ້ເຫັນມາແລ້ວຈາກຂ້າພະເຈົ້າ, ແລະ ໄດ້ຍິນວ່າຂ້າພະເຈົ້າກໍາລັງຕໍ່ສູ້ຢູ່ໃນເວລານີ້.

2 [1]ຖ້າມີການຊູໃຈໃນພຣະເຢຊູຄຣິດເຈົ້າ, ຖ້າມີການເລົ້າໂລມໃຈຈາກຄວາມຮັກຂອງພຣະອົງ, ຖ້າມີການສາມັກຄີທຳໃນຝ່າຍຈິດວິນຍານ,
ຖ້າມີຄວາມເຫັນອົກເຫັນໃຈ ແລະ ຄວາມເມດຕາປານີ ປະການໃດ,[2]ແລ້ວ ຈົ່ງເຮັດໃຫ້ຄວາມຍິນດີຂອງຂ້າພະເຈົ້າ ເຕັມລົ້ນ
ດ້ວຍການຄິດເຫມືອນຢ່າງດຽວກັນ, ມີຄວາມຮັກເຫມືອນຢ່າງດຽວກັນ, ແລະ ມີຄວາມສາມັກຄີ ເປັນນ້ຳຫນຶ່ງໃຈດຽວກັນໃນຝ່າຍຈິດວິນຍານ.

[3]ຢ່າເຮັດສິ່ງໃດ ເພາະເຫັນແກ່ຕົວ ຫລື ຊິງດີຊິງເດັ່ນກັນ. ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນເອງ.
[4]ຢ່າໃຫ້ຜູ້ໃດເຫັນແກ່ປະໂຫຍດສ່ວນຕົວຝ່າຍດຽວ, ແຕ່ຈົ່ງເຫັນແກ່ປະໂຫຍດຂອງຄົນອື່ນດ້ວຍ.
[5]ຈົ່ງຄິດເໝືອນຢ່າງພຣະເຢຊູຄຣິດເຈົ້າ.[6]ພຣະອົງຊົງສະພາບ ເປັນພຣະເຈົ້າ, ແຕ່ ພຣະອົງບໍ່ໄດ້ຖືວ່າຄວາມເທົ່າທຽມຂອງພຣະອົງກັບພຣະເຈົ້າ
ນັ້ນເປັນສິ່ງທີ່ຕ້ອງຢຶດຫວງໄວ້.[7]ແຕ່ພຣະອົງຊົງຍອມສະຫລະຖານະຂອງພຣະອົງເອງ, ພຣະອົງມາຮັບສະພາບເປັນຂ້ອຍຂ້າ.
ພຣະອົງຊົງຖືກຳເນີດເປັນມະນຸດ.[8]ແລະ ພຣະອົງຊົງຍອມເຊື່ອຟັງຈົນເຖິງຄວາມມໍຣະນາເທິງໄມ້ກາງແຂນ!
[9]ດ້ວຍເຫດນີ້ ພຣະເຈົ້າ ຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດ. ໄດ້ຊົງປະທານພຣະນາມຂອງພຣະອົງ ຢູ່ເຫນືອນາມທຸກນາມທັງປວງ.
[10]ພຣະອົງກະທຳດັ່ງນີ້ ເພື່ອວ່າໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ທຸກຫົວເຂົ່າໃນສະຫວັນ ແລະ ຢູ່ເທິງແຜ່ນດິນໂລກ ແລະ ໃຕ້ພື້ນດິນ
ຈະຄຸເຂົ່າລົງຂາບພຣະອົງ.[11]ພຣະອົງກະທຳດັ່ງນີ້ ເພື່ອໃຫ້ທຸກລີ້ນຍອມຮັບດ້ວຍປາກວ່າພຣະເຢຊູຄຣິດເຈົ້າ ຊົງເປັນອົງພຣະຜູ້ເປັນເຈົ້າ,
ເພື່ອຖວາຍພຣະກຽດແກ່ພຣະເຈົ້າພຣະບິດາ.
[12]ດັ່ງນັ້ນ, ທ່ານທີ່ຮັກ ຂອງຂ້າພະເຈົ້າເອີຍ, ເຫມືອນດັ່ງທີ່ທ່ານເຊື່ອຟັງຢູ່ສະເຫມີມາ, ບໍ່ພຽງສະເພາະເວລາທີ່ຂ້າພະເຈົ້າຢູ່ດ້ວຍເທົ່ານັ້ນ
ແຕ່ຈົ່ງເຮັດຫລາຍກວ່ານັ້ນອີກ ໃນເມື່ອເວລາທີ່ຂ້າພະເຈົ້າບໍ່ຢູ່, ຈົ່ງປະພຶດຕົວໃຫ້ສົມກັບຄວາມພົ້ນທີ່ໄດ້ຮັບດ້ວຍຄວາມຢຳເກງ ແລະ ຕົວສັ່ນ.
[13]ເພາະພຣະເຈົ້າເປັນຜູ້ກຳລັງກະທຳ ການຢູ່ພາຍໃນທ່ານ ເພື່ອໃຫ້ທ່ານມີຄວາມຕັ້ງໃຈ ແລະ ດຳເນີນງານເພື່ອໃຫ້ເປັນທີ່ພໍພຣະໄທຂອງພຣະອົງ.
[14]ຈົ່ງເຮັດທຸກສິ່ງ ໂດຍບໍ່ມີການຈົ່ມ ຫລື ຖົກຖຽງກັນ,[15]ໃຫ້ປະຕິບັດເຊັ່ນນີ້ ເພື່ອວ່າທ່ານຈະເປັນຜູ້ທີ່ບໍ່ຖືກຕິຕຽນ ແລະ ບໍ່ມີຄວາມຜິດ,
ລູກຂອງພຣະເຈົ້າ ຜູ້ບໍ່ມີຄວາມຜິດ. ຈົ່ງປະຕິບັດຢ່າງນີ້ ເພື່ອທີ່ທ່ານຈະສ່ອງແສງດັ່ງຄວາມສະຫວ່າງຢູ່ໃນໂລກ, ທ່າມກາງຄົນໃນຍຸກນີ້
ເຊິ່ງເຕັມໄປດ້ວຍການສໍ້ໂກງ ແລະ ຊົ່ວຮ້າຍ.[16]ຈົ່ງຍຶດຫມັ້ນໃນຖ້ອຍຄຳ ແຫ່ງຊີວິດ ເພື່ອວ່າຂ້າພະເຈົ້າຈະມີເຫດໃຫ້ອວດອ້າງໄດ້
ໃນວັນແຫ່ງພຣະເຢຊູຄຣິດເຈົ້າ. ເມື່ອນັ້ນຂ້າພະເຈົ້າຈະຮູ້ວ່າ ຂ້າພະເຈົ້າບໍ່ໄດ້ບາກບັ່ນ ແລະ ເຮັດງານຫນັກຢ່າງໄຮ້ປະໂຫຍດ.
[17]ແຕ່ເຖິງແມ່ນວ່າ ຂ້າພະເຈົ້າ ຈະຕ້ອງສະຫລະຊີວິດຖວາຍເປັນເຄື່ອງບູຊາ ເທິງແທ່ນບູຊາ ແລະ
ເປັນປະໂຫຍດຕໍ່ຄວາມເຊື່ອຂອງທ່ານທັງຫລາຍ, ຂ້າພະເຈົ້າກໍຍັງມີ ຄວາມຍິນດີ, ແລະ ຊົມຊື່ນຍິນດີຮ່ວມກັບພວກທ່ານທັງຫລາຍດ້ວຍ.
[18]ໃນລັກສະນະຢ່າງດຽວກັນທ່ານກໍຄວນຈະຍິນດີ, ແລະ ຊື່ນຊົມຮ່ວມກັບຂ້າພະເຈົ້າດ້ວຍ.
[19]ແຕ່ຂ້າພະເຈົ້າຫວັງໃຈໃນອົງພຣະເຢຊູຄຣິດເຈົ້າ ວ່າຈະສົ່ງຕີໂມທຽວ ໄປຫາທ່ານໂດຍໄວ ເພື່ອທີ່ຂ້າພະເຈົ້າຈະໄດ້ຮັບຄວາມໜູນໃຈ
ເມື່ອໄດ້ຮັບຮູ້ສິ່ງທີ່ກ່ຽວກັບພວກທ່ານ.[20]ເພາະຂ້າພະເຈົ້າບໍ່ມີຜູ້ໃດ ທີ່ມີຄວາມຫ່ວງໄຍທ່ານທັງຫລາຍ ເຫມືອນຢ່າງຕີໂມທຽວ.
[21]ສ່ວນຄົນອື່ນໆຫ່ວງແຕ່ຜົນປະໂຫຍດສ່ວນຕົວ ບໍ່ແມ່ນສິ່ງທີ່ກ່ຽວກັບພຣະເຢຊູຄຣິດເຈົ້າ
[22]ແຕ່ທ່ານຮູ້ວ່າເຂົາເຫມາະສົມຢ່າງຍິ່ງ ເພາະເຂົາຮ່ວມງານກັບຂ້າພະເຈົ້າ ໃນຂ່າວປະເສີດ ເຫມືອນດັ່ງລູກທີ່ຄອຍປະຕິບັດຕໍ່ພໍ່ຂອງຕົນ[23]ດັ່ງນັ້ນ
ຂ້າພະເຈົ້າຫວັງໃຈວ່າ ຈະສົ່ງເຂົາມາຫາທ່ານໂດຍໄວທັນທີ ທີ່ຂ້າພະເຈົ້າຮູ້ວ່າເກີດຫຍັງຂຶ້ນກັບຂ້າພະເຈົ້າ.[24]ແຕ່ຂ້າພະເຈົ້າຫມັ້ນໃຈໃນ
ອົງພຣະຜູ້ເປັນເຈົ້າ ວ່າຂ້າພະເຈົ້າເອງຈະໄດ້ມາຫາພວກທ່ານໃນໄວໆນີ້ເໝືອນກັນ.
[25]ແຕ່ຂ້າພຣະເຈົ້າ ຄິດເຫັນວ່າມີຄວາມຈຳເປັນຕ້ອງສົ່ງເອປາໂຟດີໂຕ ກັບໄປຫາພວກທ່ານ. ເຂົາເປັນເຫມືອນນ້ອງຊາຍ ແລະ ເພື່ອນຮ່ວມງານ
ແລະ ເປັນເພື່ອນທະຫານຂອງຂ້າພະເຈົ້າ, ແລະ ຍັງເປັນຕົວແທນຂອງທ່ານ ແລະ ຜູ້ຮັບໃຊ້ທີ່ຄອຍ
ຊ່ວຍເຫລືອໃນຄວາມຈຳເປັນຂອງຂ້າພະເຈົ້າ.[26]ເພາະວ່າເພິ່ນກັງວົນໃຈ ແລະ
ປາຖະຫນາທີ່ຈະຢູ່ກັບທ່ານທັງຫລາຍເພາະພວກທ່ານທັງຫລາຍເປັນທຸກໃຈ ເນື່ອງ ຈາກພວກທ່ານໄດ້ຮັບຂ່າວວ່າເພິ່ນບໍ່ສະບາຍ.
[27]ເພິ່ນປ່ວຍຫນັກເກືອບຕາຍແຕ່ພຣະເຈົ້າໄດ້ຊົງໂຜດເມດຕາແກ່ເພິ່ນ, ແລະ ບໍ່ພຽງແຕ່ແກ່ເພິ່ນຜູ້ດຽວເທົ່ານັ້ນ,
ແຕ່ແກ່ຂ້າພະເຈົ້າດ້ວຍເພື່ອວ່າຂ້າພະເຈົ້າຈະບໍ່ມີຄວາມທຸກຫນັກໄປກວ່ານີ້.
[28]ເພາະສະນັ້ນຂ້າພະເຈົ້າຈຶ່ງປາຖະຫນາທີ່ຈະສົ່ງເຂົາໄປຫາພວກທ່ານໂດຍໄວຍິ່ງຂຶ້ນ, ເພື່ອວ່າພວກທ່ານເຫັນເພິ່ນກັບຄືນ ທ່ານຈະຍິນດີ ແລະ
ຂ້າພະເຈົ້າກໍຈະຫາຍກັງວົນ.[29]ຈົ່ງຕ້ອນຮັບເອປາໂຟດີໂຕໄວ້ໃນອົງພຣະຜູ້ເປັນເຈົ້າ ດ້ວຍຄວາມຊົມຊື່ນຍິນດີ ຈົ່ງໃຫ້ກຽດແກ່ຄົນດັ່ງເພິ່ນ,
[30]ເພາະເພື່ອງານຂອງພຣະເຢຊູຄຣິດເຈົ້າ ເພິ່ນເກືອບຈະສູນເສຍຊີວິດ ເພາະເພິ່ນໄດ້ສ່ຽງຊີວິດຂອງເພິ່ນເພື່ອ ບົວລະບັດຮັບໃຊ້ ຂ້າພະເຈົ້າ ແລະ
ເຮັດແທນໃນສິ່ງທີ່ທ່ານບໍ່ອາດເຮັດໃຫ້ຂ້າພະເຈົ້າໄດ້.


generated on Tue Jun 17 19:01:42 2025

3 [1]ສຸດທ້າຍນີ້, ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າ, ຈົ່ງຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າ.
ສຳລັບຂ້າພະເຈົ້າແລ້ວການຂຽນຂໍ້ຄວາມຢ່າງດຽວກັນນີ້ ເຖິງທ່ານອີກຄັ້ງຫນຶ່ງບໍ່ແມ່ນເລື່ອງທີ່ລຳບາກ.
ສິ່ງນີ້ອາດຈະເຮັດໃຫ້ທ່ານທັງຫລາຍປອດໄພ.[2]ລະວັງພວກຫມາ, ຈົ່ງລະວັງພວກທີ່ເຮັດຊົ່ວຮ້າຍ, ຈົ່ງລະວັງພວກຖືການປາດເນື້ອເຖືອຫນັງ.
[3]ເພາະວ່າທ່ານທັງຫລາຍເປັນຜູ້ທີ່ຖືພິທີຕັດ ເປັນຜູ້ທີ່ນະມັດສະການ ດ້ວຍພຣະວິນຍານຂອງພຣະເຈົ້າ. ເປັນຜູ້ທີ່ອວດອ້າງໃນພຣະເຢຊູຄຣິດເຈົ້າ
ແລະ ເປັນຜູ້ທີ່ບໍ່ໄວ້ໃຈໃນຝ່າຍເນື້ອຫນັງ.

[4]ເຖິງຢ່າງນັ້ນ, ຕົວຂ້າພະເຈົ້າເອງອາດມີເຫດໃຫ້ໄວ້ໃຈໃນເນື້ອຫນັງກໍຕາມ. ຖ້າ ຜູ້ໃດຄິດວ່າຕົນເອງໄວ້ໃຈໃນເນື້ອຫນັງນັ້ນ.
ຂ້າພະເຈົ້າກໍມີຫລາຍກວ່າເຂົາອີກ.[5]ຂ້າພະເຈົ້າເຂົ້າສູ່ພິທີຕັດ ເມື່ອເກີດມາໄດ້ແປດວັນ, ເປັນຄົນອິດສະຣາເອນ ໃນເຜົ່າເບັນຢາມິນ,
ເປັນຄົນເຮັບເຣີ ທີ່ເກີດຈາກຊາວເຮັບເຣີ; ໃນດ້ານກົດບັນຍັດ, ກໍຢູ່ໃນຄະນະຟາຣີຊາຍ.
[6]ເມື່ອໃຈຮ້ອນຮົນ, ຂ້າພະເຈົ້າກໍໄດ້ຂົ່ມເຫັງຄຣິສຕະຈັກ; ໃນດ້ານຄວາມຊອບທຳ ຊຶ່ງມີຢູ່ໃຕ້ກົດບັນຍັດ, ຂ້າພະເຈົ້າ ບໍ່ໄດ້ມີທີ່ຕິຕຽນໄດ້.[7]ແຕ່
ທີ່ເປັນປະໂຫຍດ ແກ່ຂ້າພະເຈົ້າ, ຂ້າພະເຈົ້າໄດ້ພິຈາລະນາຖືສິ່ງເຫລົ່ານັ້ນວ່າເປັນອັນໄຮ້ປະໂຫຍດ ເພາະເຫັນແກ່ພຣະເຢຊູຄຣິດເຈົ້າ.
[8]ທີ່ຈິງແລ້ວ, ຂ້າພະເຈົ້າຖືວ່າ ທຸກສິ່ງເປັນຂອງໄຮ້ປະໂຫຍດ ເພາະເຫັນແກ່ສິ່ງທີ່ມີຄຸນຄ່າອັນສູງກວ່ານັ້ນຄື ການຮູ້ຈັກພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ. ເພື່ອພຣະອົງນັ້ນ ຂ້າພະເຈົ້າຍອມສະຫລະທຸກສິ່ງ. ແລະ ຂ້າພະເຈົ້າຖືວ່າສິ່ງ ເຫຼົ່ານັ້ນ
ເປັນເໝືອນຂີ້ເຫຍື້ອເພື່ອວ່າຂ້າພະເຈົ້າ ຈະໄດ້ອົງພຣະເຢຊູຄຣິດເຈົ້າມາເປັນ ປະໂຫຍດ.[9]ແລະ ຈະໄດ້ເຫັນວ່າຂ້າພະເຈົ້າຢູ່ໃນພຣະອົງ.
ຂ້າພະເຈົ້າບໍ່ມີຄວາມຊອບທຳຂອງຂ້າພະເຈົ້າເອງ ຊຶ່ງໄດ້ມາໂດຍກົດບັນຍັດ. ແຕ່ ຂ້າພະເຈົ້າມີຄວາມຊອບທຳມາໂດຍຄວາມເຊື່ອ ໃນພຣະເຢ
ຊູຄຣິດເຈົ້າ, ຄືຄວາມຊອບທຳທີ່ມາຈາກພຣະເຈົ້າ ຊຶ່ງອາໄສຄວາມເຊື່ອ.[10]ເຫດສະນັ້ນ, ບັດນີ້ຂ້າພະເຈົ້າ ຕ້ອງການຈະໄດ້ຮູ້ຈັກພຣະອົງ ແລະ
ຣິດອຳນາດແຫ່ງການຟື້ນຄືນພຣະຊົນຂອງພຣະອົງ ແລະ ມີສ່ວນຮ່ວມໃນການທົນທຸກຂອງພຣະອົງດ້ວຍ.
ຂ້າພະເຈົ້າປາຖະຫນາຈະໄດ້ຮັບການປ່ຽນແປງ ໃຫ້ເປັນເຫມືອນພຣະອົງໃນການຕາຍຂອງພຣະອົງ,[11]ເພື່ອທີ່ວ່າຂ້າພະເຈົ້າ
ຈະໄດ້ປະສົບການໃນການເປັນຄືນມາຈາກຄວາມຕາຍດ້ວຍ.
[12]ບໍ່ແມ່ນວ່າ ຂ້າພະເຈົ້າໄດ້ຮັບສິ່ງເຫລົ່ານີ້ແລ້ວ, ຫລື ຂ້າພະເຈົ້າດີພ້ອມແລ້ວ. ແຕ່ຂ້າພະເຈົ້າກຳລັງບາກບັ່ນມຸ່ງໜ້າໄປເພື່ອ
ທີ່ຈະໄດ້ຮັບເອົາເຫມືອນດັ່ງພຣະເຢຊູຄຣິດເຈົ້າ ທີ່ພຣະອົງໄດ້ຊົງຮັບຂ້າພະເຈົ້າໄວ້ແລ້ວ.[13]ພີ່ນ້ອງທັງຫລາຍເອີຍ, ຂ້າພະເຈົ້າບໍ່ຄິດວ່າ
ຂ້າພະເຈົ້າໄດ້ຮັບແລ້ວ. ແຕ່ກຳລັງເຮັດສິ່ງຫນຶ່ງ: ຄືຂ້າພະເຈົ້າລືມສິ່ງທີ່ຜ່ານມາແລ້ວເສຍ ແລະ ໂນ້ມຕົວໄປຫາສິ່ງທີ່ຢູ່ເບື້ອງໜ້າ.
[14]ຂ້າພະເຈົ້າບາກບັ່ນມຸ່ງໄປ ສູ່ຫລັກໄຊ ເພື່ອຈະໄດ້ຮັບລາງວັນ ຄືການຊົງເອີ້ນຈາກພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າ.
[15]ພວກເຮົາທີ່ເປັນຜູ້ໃຫຍ່ ແລ້ວຝ່າຍຄວາມເຊື່ອ, ໃຫ້ຄິດຢ່າງດຽວກັນນີ້; ແລະ ຖ້າທ່ານຄິດເຫັນເປັນຢ່າງອື່ນໃນເລື່ອງໃດ,
ພຣະເຈົ້າກໍຈະຊົງໂພດສຳແດງສິ່ງເຫລົ່ານັ້ນໃຫ້ທ່ານເຫັນດ້ວຍ.[16]ຢ່າງໃດກໍຕາມ, ເມື່ອພວກເຮົາເຖິງຂັ້ນໃດແລ້ວ,
ກໍໃຫ້ພວກເຮົາດຳເນີນຕາມນັ້ນຕໍ່ໄປ.
[17]ພີ່ນ້ອງທັງຫລາຍເອີຍ, ຈົ່ງປະຕິບັດຕາມແບບຢ່າງຂ້າພະເຈົ້າ ແລະ
ເຝົ້າເບິ່ງຄົນທັງຫລາຍເຫລົ່ານັ້ນທີ່ເດີນຕາມແບບຢ່າງທີ່ທ່ານເຫັນໃນພວກເຮົາ.[18]ຊຶ່ງຂ້າພະເຈົ້າໄດ້ບອກທ່ານເຖິງເລື່ອງນີ້ຫລາຍຄັ້ງແລ້ວ ແລະ
ບັດນີ້ຂ້າພະເຈົ້າກໍຂໍບອກດ້ວຍນ້ຳຕາໄຫລວ່າ ມີຫລາຍຄົນທີ່ປະພຶດຕົວ ເປັນສັດຕູຕໍ່ໄມ້ກາງແຂນຂອງພຣະເຢຊູຄຣິດເຈົ້າ.
[19]ເພາະພະເຈົ້າຂອງພວກເຂົາ ແມ່ນທ້ອງຂອງພວກເຂົາເອງ, ພວກເຂົາອວດອ້າງ ໃນສິ່ງທີ່ໜ້າອັບອາຍຂອງພວກເຂົາ.
ພວກເຂົາຄິດຖຶງແຕ່ສິ່ງຂອງຝ່າຍໂລກ.
[20]ແຕ່ເຮົາທີ່ເປັນພົນລະເມືອງແຫ່ງສະຫວັນ, ທີ່ເຮົາຄອງຄອຍພຣະຜູ້ຊ່ວຍໃຫ້ພົ້ນ ຄືອົງພຣະເຢຊູຄຣິດເຈົ້າ.[21]ພຣະອົງ
ຈະຊົງປ່ຽນຮ່າງກາຍອັນຕ່ຳຕ້ອຍຂອງເຮົາ ໃຫ້ ເປັນເໝືອນພຣະກາຍອັນຊົງສະຫງ່າຣາສີຂອງພຣະອົງ, ດ້ວຍຣິດທານຸພາບຂອງພຣະອົງ
ທີ່ຈະຊົງສາມາດ ປາບສັບພະທຸກສິ່ງໃຫ້ລົງຢູ່ໃຕ້ ອຳນາດຂອງພຣະອົງ.


generated on Tue Jun 17 19:01:42 2025

4 [1]ເຫດສະນັ້ນ, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ ຜູ້ຊຶ່ງຂ້າພະເຈົ້າປາຖະໜາຢາກພົບພວກທ່ານຜູ້ເປັນຄວາມຊື່ນຊົມຍິນດີ ແລະ
ເປັນມົງກຸດຂອງຂ້າພະເຈົ້າ, ຈົ່ງຕັ້ງຫມັ້ນຢູ່ໃນອົງພຣະຜູ້ເປັນເຈົ້າ.[2]ຂ້າພະເຈົ້າຂໍຮ້ອງນາງຢູໂອເດຍ, ແລະ ນາງຊິນຕີເຂ,
ໃຫ້ມີຄວາມຄິດຖືກຕ້ອງປອງດອງກັນ ໃນອົງພຣະຜູ້ເປັນເຈົ້າ. [3]ຄວາມຈິງແລ້ວຂ້າພະເຈົ້າຂໍຮ້ອງ
ພວກທ່ານເຊັ່ນກັນຜູ້ເປັນເພື່ອນຮ່ວມງານທີ່ແທ້ຈິງ ຂອງຂ້າພະເຈົ້າໂຜດຊ່ວຍເຫລືອຜູ້ຍິງເຫລົ່ານີ້. ເພາະພວກເຂົາໄດ້ເຮັດວຽກຢ່າງຫນັກຫນ່ວງ
ກັບຂ້າພະເຈົ້າໃນການປະກາດຂ່າວປະເສີດພ້ອມກັບ ກະເລເມ ແລະ ເພື່ອນຮ່ວມງານຄົນອື່ນໆຂອງຂ້າພະເຈົ້າດ້ວຍ,
ຊຶ່ງມີລາຍຊື່ຢູ່ໃນທະບຽນແຫ່ງຊີວິດ

[4]ຈົ່ງຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າຕະຫລອດເວລາ. ຂ້າພະເຈົ້າຂໍຢ້ຳອີກວ່າຈົ່ງ ຊົມຊື່ນຍິນດີເທີ້ນ.
[5]ຈົ່ງໃຫ້ໃຈອ່ອນສຸພາບຂອງທ່ານທັງຫລາຍປາກົດແກ່ຜູ້ຄົນທັງປວງອົງພຣະຜູ້ເປັນເຈົ້າຊົງຢູ່ໃກ້ແລ້ວ.
[6]ຢ່າທຸກຮ້ອນໃຈໃນສິ່ງໃດເລີຍແຕ່ຈົ່ງທູນເລື່ອງທຸກສິ່ງດ້ວຍການພາວັນນາອະທິຖານ ແລະ ດ້ວຍການອ້ອນວອນຂໍ,
ດ້ວຍການຂອບພຣະຄຸນໃຫ້ພຣະເຈົ້າຊົງຊາບການຮ້ອງຂໍຂອງພວກທ່ານ.[7]ແລ້ວສັນຕິສຸກຂອງພຣະເຈົ້າ
ຊຶ່ງເກີນຄວາມເຂົ້າໃຈທັງຫມົດຈະເຝົ້າຮັກສາຈິດໃຈ ແລະ ຄວາມຄິດຂອງພວກທ່ານທັງຫລາຍໄວ້ໃນພຣະເຢຊູຄຣິດເຈົ້າ.
[8]ສຸດທ້າຍນີ້ພີ່ນ້ອງ ທັງຫລາຍເອີຍ ສິ່ງໃດທີ່ເປັນຈິງ ສິ່ງໃດທີ່ໜ້ານັບຖື ສິ່ງໃດທີ່ ຍຸດຕິທຳສິ່ງໃດທີ່ບໍຣິສຸດ ສິ່ງໃດທີ່ໜ້າຮັກ ສິ່ງໃດທີ່ໜ້າຍິນດີ ສິ່ງໃດ
ທີ່ລ້ຳເລີດ ແລະ ຖ້າມີ ສິ່ງໃດທີ່ຫນ້າສັນລະເສີນໃຫ້ຄິດເຖິງ ສິ່ງເຫລົ່ານັ້ນ.[9]ສິ່ງທີ່ພວກທ່ານໄດ້ຮຽນຮູ້ ໄດ້ຮັບ ໄດ້ຍິນ ແລະ
ເຄີຍເຫັນໃນຂ້າພະເຈົ້າ ໃຫ້ເຮັດສິ່ງເຫລົ່ານີ້ແລ້ວ ພຣະເຈົ້າແຫ່ງສັນຕິສຸກຈະຊົງສະຖິດຢູ່ນຳທ່ານທັງຫລາຍ.
[10]ຂ້າພະເຈົ້າຊື່ນຊົມຍິນດີ ໃນອົງພຣະຜູ້ເປັນເຈົ້າຢ່າງຍິ່ງ ເພາະໃນທີ່ສຸດພວກທ່ານໄດ້ລະນຶກເຖິງຂ້າພະເຈົ້າອີກໃນຕອນນີ້
ເມື່ອກ່ອນພວກທ່ານເຄີຍເປັນຫ່ວງຂ້າພະເຈົ້າຢ່າງຈິງຈັງ
ແຕ່ກໍຍັງບໍ່ໄດ້ມີໂອກາດທີ່ຈະໃຫ້ພວກທ່ານຊ່ວຍຂ້າພະເຈົ້າ[11]ຂ້າພະເຈົ້າບໍ່ໄດ້ຮຽກຮ້ອງເພື່ອຄວາມຕ້ອງການຂອງຂ້າພະເຈົ້າ
ເພາະຂ້າພະເຈົ້າຮຽນຮູ້ທີ່ຈະພໍໃຈຢູ່ໃນທຸກສະຖານະການ.[12]ຂ້າພະເຈົ້າຮຽນຮູ້ທີ່ຈະຢູ່ຢ່າງຂັດສົນ ຫລື ຢູ່ຢ່າງອຸດົມສົມບູນໃນທຸກທາງ ແລະ
ໃນທຸກສິ່ງຂ້າພະເຈົ້າຮຽນຮູ້ເຖິງ ຄວາມລັບໃນເມື່ອຍາມອີ່ມທ້ອງ ແລະ ເມື່ອຍາມອຶດຢາກ ທັງເມື່ອຍາມມີຢ່າງຫລວງຫລາຍ ແລະ
ເມື່ອຍາມຂັດສົນ.[13]ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍ ພຣະອົງຜູ້ຊົງເສີມກຳລັງຂ້າພະເຈົ້າ.
[14]ຢ່າງໃດກໍຕາມພວກທ່ານໄດ້ມີສ່ວນຮ່ວມໃນຄວາມທຸກລຳບາກທັງຫລາຍຂອງຂ້າພະເຈົ້າ.[15]ພີ່ນ້ອງຊາວຟີລິບປອຍເອີຍ, ທ່ານຮູ້ວ່າ ເມື່ອເລີ່ມຕົ້ນ
ໃນການປະກາດຂ່າວປະເສີດເມື່ອຂ້າພະເຈົ້າໄດ້ອອກຈາກແຂວງມາເກໂດເນຍໄປນັ້ນ ບໍ່ມີໃຜສະຫນັບສະຫນູນຂ້າພະເຈົ້າ
ທັງໃນການໃຫ້ຂອງບໍລິຈາກ ແລະ ການຮັບຂອງບໍລິຈາກເລີຍນອກຈາກພວກທ່ານເທົ່ານັ້ນ.[16]ເມື່ອຕອນທີ່ຂ້າພະເຈົ້າຢູ່ໃນເມືອງເທສະໂລນິກ
ພວກທ່ານກໍໄດ້ ສົ່ງສິ່ງທີ່ຂ້າພະເຈົ້າຂາດຢູ່ ມາຊ່ວຍຂ້າພະເຈົ້າຫລາຍຄັ້ງ.[17]ຂ້າພະເຈົ້າບໍ່ໄດ້ຫວັງໃນຂອງບໍລິຈາກ
ແຕ່ຂ້າພະເຈົ້າຢາກເຫັນຜົນເພີ່ມຂຶ້ນໃນບັນຊີຂອງພວກທ່ານ
[18]ຂ້າພະເຈົ້າໄດ້ຮັບທຸກຢ່າງແລ້ວ ແລະ ຂ້າພະເຈົ້າມີຢ່າງຫລວງຫລາຍ ຂ້າພະເຈົ້າອີ່ມ ເຕັມແລ້ວ
ຂ້າພະເຈົ້າໄດ້ຮັບສິ່ງຂອງທີ່ພວກທ່ານໄດ້ຝາກເອປາໂຟດີໂຕ ຊຶ່ງເປັນກິ່ນຫອມຫວານ ແລະ ເປັນເຄື່ອງບູຊາ ຊຶ່ງເປັນທີ່ພໍພຣະໄທພຣະເຈົ້າ.
[19]ແລ້ວພຣະເຈົ້າຈະຊົງໂຜດເພີ່ມເຕີມທຸກສິ່ງສາລະພັດ ທີ່ພວກທ່ານຂາດ ຢູ່ນັ້ນຈາກຊັບອັນຮຸ່ງເຮືອງ ຂອງພຣະອົງໃນພຣະເຢຊູຄຣິດເຈົ້າ.
[20]ຂໍໃຫ້ພຣະເຈົ້າພຣະບິດາຂອງເຮົາໄດ້ຮັບພຣະກຽດສືບໆໄປເປັນນິດ ອາແມນ.
[21]ຂໍຝາກຄວາມຄິດເຖິງທັກທາຍມາຍັງຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດເຈົ້າ ພີ່ນ້ອງທັງຫລາຍ
ທີ່ຢູ່ກັບຂ້າພະເຈົ້າກໍສົ່ງຄວາມຄິດເຖິງມາຫາພວກທ່ານດ້ວຍ.[22]ບັນດາຜູ້ເຊື່ອທັງຫລາຍທີ່ນີ້ ຝາກທັກທາຍທ່ານທັງຫລາຍ ໂດຍສະເພາະຄົນ
ທີ່ຢູ່ໃນພະຣາຊະວັງຂອງຈັກກະພັດຊີຊາ.[23]ຂໍພຣະຄຸນ ຂອງອົງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ກັບ ຈິດວິນຍານຂອງພວກທ່ານ.

# ໂກໂລຊາຍ

1 [1]ໂປໂລ, ຜູ້ທີ່ເປັນອັກຄະສາວົກ ຂອງພຣະເຢຊູຄຣິດເຈົ້າຕາມນ້ຳພຣະໄທຂອງພຣະເຈົ້າ, ແລະ ຕີໂມທຽວນ້ອງຊາຍຂອງເຮົາ.[2]ຮຽນບັນດາຜູ້ທີ່
ເຊື່ອ ແລະ ພີ່ນ້ອງທີ່ຊື່ສັດໃນພຣະເຢຊູຄຣິດເຈົ້າທີ່ຢູ່ໃນເມືອງໂກໂລຊາຍ. ຂໍໃຫ້ພຣະຄຸນ ແລະ ສັນຕິສຸກຊຶ່ງມາຈາກພຣະເຈົ້າ
ພຣະບິດາຂອງເຮົາຢູ່ກັບທ່ານທັງຫລາຍເທີ້ນ.[3]ເຮົາຂອບພຣະຄຸນພຣະເຈົ້າ, ຜູ້ຊົງເປັນພຣະບິດາເຈົ້າຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ
ສະເໝີ ແລະ ເຮົາອະທິຖານເພື່ອທ່ານທັງຫຼາຍຢູ່ສະເໝີ.

[4]ເພາະເຮົາໄດ້ຍິນເຖິງຄວາມເຊື່ອຂອງທ່ານໃນພຣະເຢຊູຄຣິດເຈົ້າ ແລະ ເລື່ອງຄວາມຮັກຊຶ່ງທ່ານມີຕໍ່ບັນດາຜູ້ບໍລິສຸດຂອງພວກເຈົ້າ.
[5]ເຫດທີ່ທ່ານມີຄວາມຮັກນີ້ເປັນເພາະຄວາມຫມັ້ນໃຈໃນຄວາມຫວັງທີ່ໄດ້ຖືກເກັບຮັກສາໄວ້ເພື່ອທ່ານໃນສະຫວັນ.
ຊຶ່ງເມື່ອກ່ອນທ່ານເຄີຍໄດ້ຍິນເລື່ອງຄວາມຫມັ້ນໃຈໃນຄວາມຫວັງນີ້ມາແລ້ວໃນຄຳແຫ່ງຄວາມຈິງ, ຄືຂ່າວປະເສີດ[6]ແລະ ໄດ້ມາເຖິງທ່ານ.
ຂ່າວປະເສີດນີ້ກຳລັງເກີດຜົນ ແລະ ເຕີບໂຕໄປທົ່ວທັງໂລກເຊັ່ນດຽວກັບທີ່ກຳລັງເກີດຜົນໃນທ່າມກາງ ພວກທ່ານທັງຫລາຍດ້ວຍ
ຕັ້ງແຕ່ວັນທີ່ພວກທ່ານໄດ້ຍິນ ແລະໄດ້ຮຽນຮູ້ກຽວກັບພຣະຄຸນຂອງພຣະເຈົ້າຕາມຄວາມຈິງນັ້ນ.
[7]ນີ້ຄືຂ່າວປະເສີດດັ່ງທີ່ທ່ານໄດ້ຮຽນຮູ້ ຈາກເອປາຟຣັດ, ຊຶ່ງເປັນເພື່ອນຮ່ວມງານທີ່ ຮັກຂອງເຮົາ, ເຂົາເປັນຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຢ
ຊູຄຣິດເຈົ້າທີ່ຮັບໃຊ້ທ່ານແທນເຮົາ[8]ເອປາຟຣັດ ໄດ້ເລົ່າໃຫ້ເຮົາຟັງເຖິງຄວາມຮັກທີ່ທ່ານມີໃນພຣະວິນຍານດ້ວຍ.
[9]ເປັນເພາະຄວາມຮັກນີ້, ນັບຕັ້ງແຕ່ມື້ທີ່ເຮົາໄດ້ຍິນເລື່ອງນີ້ເຮົາກໍບໍ່ໄດ້ຢຸດໃນການພາວັນນາອະທິຖານເພື່ອທ່ານທັງຫລາຍ.
ເຮົາໄດ້ທູນຂໍໃຫ້ທ່ານເຕັມລົ້ນດ້ວຍຄວາມຮອບຮູ້ ເຖິງນ້ຳພຣະໄທຂອງພຣະອົງໃນພຣະປັນຍາທັງຫມົດ ແລະ ໃນຄວາມເຂົ້າໃຈ ຝ່າຍວິນຍານ.
[10]ພວກເຮົາພາວັນນາອະທິຖານເພື່ອທ່ານຈະມີຊີວິດຕາມທີ່ສົມຄວນໃນອົງພຣະຜູ້ເປັນເຈົ້າໃນວິທີທາງອັນເປັນທີ່ພໍພຣະໄທຂອງພຣະເຈົ້າ.
ເຮົາອະທິຖານທີ່ທ່ານຈະເກີດຜົນໃນການດີທຸກຢ່າງ ແລະ ເພື່ອທ່ານຈະເຕີບໂຕຂຶ້ນໃນຄວາມຮອບຮູ້ຂອງພຣະເຈົ້າ.

 generated on Tue Jun 17 19:01:42 2025

[11]ເຮົາອະທິຖານຂໍໃຫ້ທ່ານມີ ກຳລັງຫລາຍຂຶ້ນທີ່ມີຄວາມຂະຫຍັນພາກພຽນ ແລະ ມີຄວາມອົດທົນໃນທຸກຢ່າງ ໃນຄວາມຂະຫຍັນພາກພຽນ
ແລະ ຄວາມອົດທົນທຸກຢ່າງຕາມລິດທານຸພາບແຫ່ງພຣະສີຣິຂອງພຣະອົງ.[12]ເຮົາອະທິຖານຂໍໃຫ້ທ່ານມີຄວາມຊື່ນຊົມຍິນດີ
ໃນການຂອບພຣະຄຸນ ພຣະບິດາເຈົ້າ, ຜູ້ຊົງໃຫ້ທ່ານທັງຫລາຍ ໄດ້ມີສ່ວນຮ່ວມໄດ້ຮັບມໍຣະດົກດ້ວຍກັນກັບ
ພວກໄພ່ພົນທັງຫລາຍທີ່ຢູ່ໃນຄວາມສະຫວ່າງ.
[13]ພຣະອົງໄດ້ຊົງຊ່ວຍເຮົາໃຫ້ພົ້ນຈາກອຳນາດຄອບຄອງຂອງຄວາມມືດ ແລະ ໄດ້ຍ້າຍເຮົາມາສູ່ຣາ
ຊາອານາຈັກແຫ່ງພຣະບຸດທີ່ຮັກຂອງພຣະອົງ,[14]ໃນພຣະບຸດນັ້ນເຮົາ ຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນ ແລະ ການຊົງຍົກໂທດບາບທັງຫລາຍ.
[15]ພຣະບຸດຊົງເປັນພາບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງເບິ່ງບໍ່ເຫັນໄດ້ດ້ວຍຕາ. ພຣະອົງຊົງເປັນບຸດຫົວປີຂອງທຸກສິ່ງທີ່ພຣະເຈົ້າສ້າງ.
[16]ເພາະວ່າທຸກສິ່ງໄດ້ຖືກສ້າງ ຂຶ້ນມາໂດຍພຣະອົງ, ບໍ່ວ່າເປັນສິ່ງທີ່ຢູ່ໃນສະຫວັນ ແລະ ສິ່ງທີ່ຢູ່ເທິງແຜ່ນດິນໂລກ, ທັງສິ່ງທີ່ເບິ່ງເຫັນດ້ວຍຕາ ແລະ
ບໍ່ວ່າສິ່ງທີ່ບໍ່ສາມາດເຫັນໄດ້ດ້ວຍຕາ. ບໍ່ວ່າຈະເປັນ ພຣະທີ່ນັ່ງ ຫລື ອານຸພາບ ຫລື ບັນດາຜູ້ຄອບຄອງ ແລະ ບັນດາຜູ້ມີສິດອຳນາດທັງຫມົດນີ້
ຕ່າງຖືກສ້າງໂດຍທາງພຣະອົງ ແລະ ສຳລັບພຣະອົງ.[17]ພຣະອົງຊົງເປັນຢູ່ກ່ອນສິ່ງທັງປວງ ແລະ ສິ່ງທັງປວງກໍດຳລົງຢູ່ດ້ວຍກັນໄດ້ໃນພຣະອົງ.
[18]ແລະ ພຣະອົງຊົງເປັນຫົວຂອງຮ່າງກາຍ, ຄືຄຣິສຕະຈັກ. ພຣະອົງຊົງເປັນຜູ້ຕັ້ງຕົ້ນ ແລະ ເປັນລູກກົກຈາກທ່າມກາງພວກຄົນຕາຍ,
ດັ່ງນັ້ນພຣະອົງ ຈຶ່ງໄດ້ເປັນ ເອກໃນສັບພະສິ່ງທັງປວງ.[19]ເພາະວ່າ ພຣະເຈົ້າຊົງພໍພຣະໄທທີ່ຈະໃຫ້ຄວາມບໍລິບູນທັງສິ້ນ
ຂອງພຣະອົງສະຖິດຢູ່ໃນພຣະອົງ.[20]ແລະ ໃຫ້ສິ່ງສາລະພັດກັບຄືນດີກັບພຣະອົງເອງ ໂດຍຜ່ານທາງພຣະບຸດພຣະເຈົ້າ ໄດ້ເຮັດໃຫ້ມີສັນຕິສຸກ
ຜ່ານທາງພຣະໂລຫິດ ແຫ່ງໄມ້ກາງແຂນຂອງພຣະອົງ.
ພຣະອົງເຮັດໃຫ້ທຸກສິ່ງໄດ້ກັບຄືນດີກັບພຣະອົງບໍ່ວ່າຈະເປັນສິ່ງທັງຫລາຍທີ່ຢູ່ເທິງແຜ່ນດິນໂລກ ຫລື ໃນສະຫວັນ.
[21]ແລະ ພວກທ່ານກໍເຊັ່ນກັນ, ຄັ້ງຫນຶ່ງທ່ານເຄີຍເປັນຄົນແປກຫນ້າຕໍ່ພຣະເຈົ້າ ແລະ ເປັນສັດຕູ ຕໍ່ພຣະເຈົ້າໃນທາງດ້ານຄວາມຄິດ ແລະ
ໃນການຊົ່ວຮ້າຍຕ່າງໆ.[22]ແຕ່ບັດນີ້ ພຣະອົງໄດ້ໃຫ້ຄືນດີກັບພຣະອົງຜ່ານທາງຄວາມຕາຍ ແຫ່ງພຣະກາຍ ຄື
ເນື້ອຫນັງຂອງພຣະອົງພຣະເຈົ້າໄດ້ຊົງເຮັດຢ່າງນີ້ເພື່ອຈະໄດ້ຖວາຍທ່ານ ໃຫ້ເປັນຜູ້ບໍຣິສຸດ ແລະ ບໍ່ມີທີ່ຕິຕຽນຢູ່ຊ້ອງຫນ້າພຣະອົງ,
[23]ຖ້າທ່ານຍັງຕັ້ງຫມັ້ນຢູ່ຕໍ່ໄປໃນຄວາມເຊື່ອ ແລະ ບໍ່ຍົກຍ້າຍໄປຈາກຄວາມຫມັ້ນໃຈໃນຄວາມຫວັງໃຈ
ແຫ່ງຂ່າວປະເສີດຊຶ່ງທ່ານເຄີຍໄດ້ຍິນມາແລ້ວນັ້ນ. ນີ້ຄືຂ່າວປະເສີດທີ່ໄດ້ປະກາດແກ່ທຸກຄົນທີ່ພຣະເຈົ້າສ້າງ ໃຫ້ຢູ່ໃຕ້ຟ້າ. ນີ້ຄືຂ່າວປະເສີດ,
ທີ່ຂ້າພະເຈົ້າໂປໂລ, ໄດ້ກາຍເປັນຜູ້ຮັບໃຊ້.
[24]ບັດນີ້ ຂ້າພະເຈົ້າຊື່ນຊົມຍິນດີໃນການທົນທຸກຂອງຂ້າພະເຈົ້າ ເພື່ອພວກທ່ານ, ແລະ
ຂ້າພະເຈົ້າກໍເຕີມໃຫ້ເຕັມໃນເນື້ອຫນັງຂອງຂ້າພະເຈົ້າໃນການທົນທຸກຂອງພຣະເຢຊູຄຣິດເຈົ້າທີ່ຍັງຂາດຢູ່ນັ້ນ ເພື່ອເຫັນແກ່ພຣະກາຍ,
ກໍຄືຄຣິສຕະຈັກ.[25]ຂ້າພະເຈົ້າໄດ້ ມາເປັນຜູ້ຮັບໃຊ້ຂອງຄຣິສຕະຈັກນີ້
ຕາມຄວາມຮັບຜິດຊອບທີ່ພຣະເຈົ້າໄດ້ຊົງມອບຫມາຍໃຫ້ຂ້າພະເຈົ້າເພື່ອທ່ານ, ຈະໄດ້ກ່າວພຣະຄຳຂອງພຣະເຈົ້າຢ່າງ ຄົບຖ້ວນ.
[26]ນີ້ເປັນຂໍ້ຄວາມອັນເລິກລັບທີ່ພຣະອົງໄດ້ເຊື່ອງຊ້ອນໄວ້ ຢູ່ຫລາຍຍຸກ ແລະ ຫລາຍຊົ່ວອາຍຸນັ້ນ.
ແຕ່ບັດນີ້ໄດ້ຖືກເປີດເຜີຍໃຫ້ແກ່ຜູ້ທີ່ເຊື່ອໃນພຣະອົງ.[27]ພຣະເຈົ້າຊົງຕ້ອງການ ໃຫ້ພວກເຂົາໄດ້
ຮູ້ຈັກຄວາມຮັ່ງມີແຫ່ງສະຫງ່າຣາສີຂອງຄວາມຈິງ ທີ່ເລິກລັບນີ້ໃນທ່າມກາງຄົນຕ່າງຊາດ. ຄືການທີ່ພຣະເຢຊູຄຣິດເຈົ້າ ຊົງ ສະຖິດຢູ່ໃນທ່ານ,
ອັນເປັນຄວາມຫມັ້ນໃຈແຫ່ງສະຫງ່າຣາສີໃນອານາຄົດ
[28]ພຣະອົງນີ້ແຫຼະຄືຜູ້ທີ່ເຮົາປະກາດຢູ່. ໂດຍເຕືອນສະຕິທຸກຄົນ, ແລະ ສັ່ງສອນທຸກຄົນດ້ວຍສະຕິປັນຍາທຸກຢ່າງ,
ເພື່ອເຮົາຈະໄດ້ຖວາຍແກ່ທຸກຄົນໃຫ້ເປັນຜູ້ທີ່ສົມບູນໃນພຣະເຢຊູຄຣິດເຈົ້າ.[29]ເພື່ອເຫດນີ້ເອງຂ້າພະເຈົ້າຈຶ່ງທົນທຸກ ແລະ
ສູ້ການຫນັກຫນ່ວງດ້ວຍພຣະກຳລັງຂອງພຣະອົງ ທີ່ຊົງທຳງານຢູ່ໃນຕົວຂ້າພະເຈົ້າ.

2 1ເພາະຂ້າພະເຈົ້າຢາກໃຫ້ ທ່ານຮູ້ວ່າຂ້າພະເຈົ້າພະຍາຍາມຕໍ່ສູ້ຫລາຍພຽງໃດເພື່ອພວກທ່ານທີ່ຢູ່ໃນ ເມືອງລາວດີເກອາ, ແລະ ຄົນອີກຫຼາຍ
ຄົນທີ່ຍັງບໍ່ໄດ້ເຫັນໜ້າຂອງຂ້າພະເຈົ້າ. 2ຂ້າພະເຈົ້າເຮັດວຽກເພື່ອພວກເຂົາ ຈະໄດ້ຮັບຄວາມຊູໃຈໂດຍການເຂົ້າຕິດສະໜິດດ້ວຍກັນ
ໃນຄວາມຮັກ ແລະ ມີຄວາມເຂົ້າໃຈຢ່າງສົມບູນໃນຄວາມຮູ້ແຫ່ງຄວາມຈິງອັນລັບເລິກ ຂອງພຣະເຈົ້າ, ຊຶ່ງກໍຄືພຣະເຢຊູຄຣິດເຈົ້າ, 3ໃນພຣະອົງ
ຊຶ່ງຊັບສົມບັດແຫ່ງສະຕິປັນຍາ ແລະ ຄວາມຮູ້ທຸກຢ່າງໄດ້ຖືກບັງຊ້ອນໄວ້.

4ຂ້າພະເຈົ້າກ່າວ ຢ່າງນີ້ກໍເພື່ອບໍ່ໃຫ້ຜູ້ໃດຫລອກລວງທ່ານ ດ້ວຍຄຳລ້ລວງອັນໜ້າຟັງ. 5ເຖິງແມ່ນວ່າຕົວຂອງຂ້າພະເຈົ້າບໍ່ຢູ່ກັບທ່ານທັງຫລາຍ,
ແຕ່ວິນຍານຂອງຂ້າພະເຈົ້າຍັງຢູ່ກັບທ່ານ. ຂ້າພະເຈົ້າມີຄວາມຊື່ນຊົມຍິນດີທີ່ໄດ້ເຫັນລະບຽບທີ່ດີຂອງພວກທ່ານ ແລະ ພະລັງແຫ່ງຄວາມເຊື່ອ
ຂອງທ່ານໃນອົງພຣະເຢຊູຄຣິດເຈົ້າ.
6ເມື່ອທ່ານໄດ້ຮັບເອົາອົງພຣະເຢຊູຄຣິດເຈົ້າ ພຣະເຈົ້າ, ແລ້ວດຳເນີນຊີວິດຢູ່ໃນພຣະອົງ. 7ຈົ່ງຢັ່ງຮາກຫມັ້ນຄົງ ແລະ ກໍ່ຮ່າງສ້າງຂຶ້ນເທິງພຣະອົງ,
ຈົ່ງຕັ້ງໝັ້ນຄົງ ຢູ່ໃນຄວາມເຊື່ອຕາມທີ່ທ່ານໄດ້ຮັບຄຳສັ່ງສອນມາ ແລະ ຈົ່ງເຕັມລົ້ນດ້ວຍການຂອບພຣະຄຸນ.
8ຈົ່ງລະວັງຢ່າໃຫ້ຜູ້ໃດນຳພວກເຈົ້າຕົກໄປເປັນເຫຍື່ອຂອງສະຕິປັນຍາອັນ ຫລອກລວງ ແລະ ງົມງວຍຕາມປະເພນີຂອງມະນຸດ,
ໃຫ້ຫລົງໄຫລໄປຕາມວິນຍານຕ່າງໆຂອງໂລກ ແລະ ທີ່ບໍ່ໄດ້ປຽນໄປຕາມພຣະເຢຊູຄຣິດເຈົ້າ. 9ເພາະວ່າ ສະພາບ
ຂອງພຣະເຈົ້າກໍດຳລົງຢູ່ຢ່າງເຕັມບໍລິບູນພາຍໃນພຣະອົງ.
10ພວກທ່ານເອງກໍຮັບຄວາມບໍລິບູນນັ້ນຢູ່ໃນພຣະອົງ. ພຣະອົງຊົງເປັນຫົວແຫ່ງຣິດອຳນາດ ແລະ ການຄອບຄອງທັງປວງ. 11ໃນພຣະອົງນັ້ນ
ທ່ານໄດ້ເຂົ້າຮັບພິທີຕັດແລ້ວ ບໍ່ແມ່ນທີ່ມະນຸດໄດ້ກະທຳໂດຍພິທີຕັດເນື້ອຫນັງເສຍ, ແຕ່ໃນການເຂົ້າພິທີຕັດແຫ່ງອົງພຣະເຢຊູຄຣິດເຈົ້າ.
12ທ່ານໄດ້ຖືກຝັງໄວ້ ກັບພຣະອົງໃນພິທີບັບຕິສະມາແລ້ວ, ແລະ
ໃນພະອົງນັ້ນທ່ານເປັນຄືນມາຈາກຕາຍໂດຍຄວາມເຊື່ອໃນຣິດເດດອຳນາດຂອງພຣະເຈົ້າ, ຜູ້ຊົງທຳໃຫ້ພຣະອົງເປັນຄືນມາຈາກຄວາມຕາຍ.
13ເມື່ອກ່ອນນັ້ນທ່ານຕາຍແລ້ວດ້ວຍການລະເມີດທັງຫລາຍຂອງທ່ານ ແລະ ໃນເນື້ອຫນັງຂອງທ່ານທີ່ບໍ່ໄດ້ເຂົ້າຮັບພິທີຕັດ,
ພຣະອົງໄດ້ຊົງໃຫ້ທ່ານມີຊີວິດ ຮ່ວມກັບ ພຣະອົງ ແລະ ຊົງໂຜດຍົກໂທດການລະເມີດທັງຫລາຍຂອງເຮົາ. 14ພຣະອົງໄດ້
ຊົງລຶບລາຍການຫນີ້ທັງຊິ້ນ ແລະ ກົດລະບຽບຕ່າງໆ ທີ່ຕໍ່ຕ້ານເຮົາພຣະອົງຊົງເອົາທັງຫມົດນັ້ນໄປຕອກຕິດໄວ້ທີ່ໄມ້ກາງແຂນແລ້ວ.
15ໂດຍໄມ້ກາງແຂນພຣະອົງປົດວິນຍານຄອບຄອງ ແລະ ວິນຍານຊົ່ວທັງຫລາຍເສຍ, ພຣະອົງໄດ້ຊົງປະຈານພວກເຂົາ, ແລະ
ຊະນະພວກເຂົາໂດຍກາງແຂນຂອງພຣະອົງ.
16ເຫດສະນັ້ນ, ຢ່າໃຫ້ຜູ້ໃດຕັດສິນທ່ານໃນເລື່ອງການກິນ ຫລື ການດື່ມ ຫລື ໃນເລື່ອງວັນສຳຄັນທາງສາສະໜາ ຫລື ວັນຕົ້ນເດືອນ, ຫລື
ໃນເລື່ອງວັນຊະບາໂຕ. 17ສິ່ງເຫຼົ່ານັ້ນເປັນພຽງແຕ່ເງົາຂອງສິ່ງທີ່ຈະມີມາເຖິງ, ແຕ່ແກ່ນແທ້ນັ້ນກໍຄືພຣະເຢຊູຄຣິດເຈົ້າ.
18ຢ່າໃຫ້ພວກທີ່ຢາກຖ່ອມຕົວ ແລະ ນະມັດສະການເຫລົ່າທູດສະຫວັນມາຕັດສິນບໍາເນັດລາງວັນຂອງທ່ານ.
ຄົນແບບນັ້ນຫລົງໄຫລໃນສິ່ງທີ່ເຂົາເຫັນ ແລະ ອວດອ້າງຕົວຂຶ້ນຕາມຄວາມຄິດຂອງເນື້ອຫນັງຂອງເຂົາ. 19ເຂົາບໍ່ໄດ້ຍຶດຫມັ້ນ ໃນສ່ວນທີ່ເປັນຫົວ,
ຫົວນັ້ນເປັນເຫດໃຫ້ກາຍທັງຫມົດ ແລະ ທີ່ເຊື່ອມຕໍ່ກັນດ້ວຍຂໍ້ແລະ ເອັນຕ່າງໆໄດ້ຮັບການບຳລຸງລ້ຽງ;
ຈຶ່ງໄດ້ຈະເລີນຂຶ້ນຕາມທີ່ພຣະເຈົ້າຊົງປະທານໃຫ້ນັ້ນ.
20ຖ້າທ່ານໄດ້ຕາຍກັບພຣະເຢຊູຄຣິດເຈົ້າ ແລະ ໄດ້ພົ້ນຈາກວິນຍານຕ່າງໆແຫ່ງໂລກນີ້ແລ້ວ, ເປັນຫຍັງທ່ານຈຶ່ງຍັງມີຊີວິດຍຶດຕິດກັບຝ່າຍໂລກ:
21“ຢ່າເອົາມືຈັບ, ຢ່າຊີມ, ຢ່າແຕະຕ້ອງ”? 22ສິ່ງເຫລົ່ານີ້ຖືກກຳນົດໃຫ້ວິບັດເມື່ອໃຊ້ມັນ, ຕາມຄຳແນະນຳ ຫລື ຄຳສັ່ງສອນຂອງມະນຸດ.
23ກົດບັນຍັດເຫລົ່ານີ້ມີປັນຍາຕາມຄວາມເຊື່ອທີ່ສ້າງຂຶ້ນມາເອງ ແລະ ການຖ່ອມຕົວ ແລະ ການທໍລະມານຮ່າງກາຍ. ແຕ່ກໍບໍ່ມີປະໂຫຍດອັນໃດ
ທີ່ຈະຕໍ່ສູ້ກັບຄວາມປາຖະຫນາຝ່າຍເນື້ອຫນັງ.


generated on Tue Jun 17 19:01:42 2025

# 3

1ຖ້າພຣະເຈົ້າໄດ້ຊົງທຳໃຫ້ທ່ານເປັນຂຶ້ນມາດ້ວຍກັນກັບພຣະເຢຊູຄຣິດເຈົ້າແລ້ວ, ກໍ ຈົ່ງສະແຫວງຫາສິ່ງທີ່ຢູ່ເບື້ອງເທິງໃນທີ່ພຣະເຢ
ຊູຄຣິດເຈົ້າຊົງປະທັບຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ. 2ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ, ບໍ່ແມ່ນສິ່ງທີ່ຢູ່ແຜ່ນດິນໂລກນີ້.
3ເພາະວ່າທ່ານໄດ້ຕາຍແລ້ວ, ແລະ ຊີວິດຂອງທ່ານກໍຖືກເຊື່ອງຊ້ອນໄວ້ກັບ ພຣະເຢຊູຄຣິດເຈົ້າໃນພຣະເຈົ້າ. 4ເມື່ອພຣະເຢ
ຊູຄຣິດເຈົ້າສະເດັດປາກົດ, ຜູ້ຊົງເປັນຊີວິດຂອງທ່ານ, ແລ້ວທ່ານກໍຈະໄດ້ມາປາກົດພ້ອມກັບພຣະອົງໃນສະຫງ່າຣາສີດ້ວຍ.

5ພວກເຈົ້າຕ້ອງປະຫານຕັນຫາທີ່ເປັນຝ່າຍໂລກນີ້ເສຍອັນໄດ້ແກ່ການຜິດສິນທຳທາງເພດ, ການຊົ່ວຮ້າຍ, ຣາຄະຕັນຫາ,
ຄວາມປາຖະໜາໃນທາງຊົ່ວຮ້າຍ ແລະ ຄວາມໂລບຊຶ່ງເປັນການຂາບໄຫວ້ຮູບເຄົາຣົບ. 6ເພາະສິ່ງເຫຼົ່ານີ້ຄວາມໂກດຮ້າຍ
ຂອງພຣະເຈົ້າຈະມາເຖິງຄົນທັງຫລາຍ ທີ່ບໍ່ເຊື່ອຟັງ. 7ຄັ້ງໜຶ່ງທ່ານເຄີຍປະພຶດສິ່ງເຫລົ່ານີ້ດ້ວຍ
ເມື່ອຊີວິດຂອງທ່ານໄດ້ຖືກຄອບງຳຢູ່ກັບສິ່ງເຫລົ່ານີ້. 8ແຕ່ບັດນີ້ ທ່ານຈົ່ງກຳຈັດສິ່ງເຫລົ່ານັ້ນທັງໝົດຖິ້ມເສຍຄື. ຄວາມຄຽດຮ້າຍ,
ຄວາມຂັດເຄືອງໃຈ ແລະ ການຄິດປອງຮ້າຍ, ຄຳສຽດສີ ແລະ ຄຳຊົ່ວຊ້າລາມົກ ໃຫ້ຫມົດໄປຈາກປາກ ຂອງທ່ານ.
9ຢ່າເວົ້າຕົວະຕໍ່ກັນ ແລະ ກັນ, ເພາະວ່າທ່ານໄດ້ຖອດຖິ້ມສະພາບມະນຸດເກົ່າ ແລະ ຄວາມປະພຶດແບບເກົ່ານັ້ນແລ້ວ. 10ແລະ
ທ່ານໄດ້ສວມສະພາບມະນຸດຄົນໃໝ່ ທີ່ກຳລັງສ້າງຂຶ້ນໃຫມ່ໃນຄວາມຮູ້ຕາມພຣະສັນຍາຂອງພຣະອົງຜູ້ຊົງສ້າງ. 11ຈຶ່ງບໍ່ມີພວກກຣີກ ຫລື
ພວກຢິວ, ບໍ່ເປັນຜູ້ຮັບພິທີຕັດ ຫລື ບໍ່ຮັບພິທີຕັດ, ພວກຄົນຕ່າງຊາດຫລື ຄົນສີວິໄລ, ບໍ່ເປັນທາດຮັບໃຊ້ ຫລື ປ່າເຖື່ອນອີກຕໍ່ໄປ ເພາະພຣະເຢ
ຊູຄຣິດເຈົ້າຊົງ ເປັນເຈົ້າຂອງສັບພະທຸກສິ່ງ ແລະ ຊົງສະຖິດຢູ່ໃນທຸກສິ່ງ.
12ໃນຖານະທີ່ເປັນພວກຊຶ່ງ ພຣະເຈົ້າຊົງເລືອກໄວ້ ຄືພວກທີ່ບໍລິສຸດເປັນທີ່ຮັກຍິ່ງ, ຈົ່ງສວມໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ,
ໃຈອົດທົນດົນນານ. 13ຈົ່ງຜ່ອນໜັກຜ່ອນເບົາ ຊຶ່ງກັນແລະກັນ. ຈົ່ງສຸພາບຕໍ່ກັນຖ້າໃຜມີເລື່ອງຮ້ອງຮຽນຕໍ່ຄົນອື່ນກໍຈົ່ງຍົກໂທດໃຫ້ ກັນ ແລະ ກັນ
ເຊັ່ນດຽວກັບອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດຍົກໂທດໃຫ້ທ່ານ. 14ຈົ່ງມີຄວາມຮັກເຫນືອທຸກສິ່ງເຫລົ່ານີ້, ຊຶ່ງເປັນ ສິ່ງຜູກພັນທຸກສິ່ງໄວ້ຈົນຄົບຖ້ວນ.
15ຈົ່ງໃຫ້ສັນຕິສຸກຂອງພຣະຄຣິດເຈົ້າຄຸ້ມຄອງຈິດໃຈຂອງທ່ານ. ພຣະເຈົ້າໄດ້ຊົງເອີ້ນທ່ານໄວ້ໃຫ້ເປັນກາຍອັນດຽວ ກໍເພື່ອສັນຕິສຸກນັ້ນ ແລະ
ຈົ່ງມີໃຈຂອບພຣະຄຸນ. 16ຈົ່ງໃຫ້ຖ້ອຍຄຳຂອງພຣະເຢຊູຄຣິດເຈົ້າສະຖິດຢູ່ ໃນຕົວທ່ານຢ່າງຫມັ້ນຄົງຈົ່ງໃຊ້ສະຕິປັນຍາທຸກຢ່າງ ໃນການສັ່ງສອນ
ແລະ ເຕືອນສະຕິກັນດ້ວຍການຮ້ອງເພງດ້ວຍເພງຍ້ອງຍໍສັນລະເສີນ, ເພງນະມັດສະການ ແລະ ເພງຝ່າຍວິນຍານ ຄືຈົ່ງຮ້ອງເພງຖວາຍ
ແດ່ພຣະເຈົ້າດ້ວຍໃຈຂອບພຣະຄຸນແດ່ພຣະເຈົ້າ. 17ແລະເມື່ອທ່ານຈະເຮັດສິ່ງໃດດ້ວຍວາຈາ ຫລື ດ້ວຍການກະທຳກໍຕາມ,
ຈົ່ງເຮັດທຸກສິ່ງນີ້ໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ແລະ ຂອບພຣະຄຸນ ພຣະບິດາເຈົ້າໂດຍພຣະອົງນັ້ນ.
18ຝ່າຍພັນລະຍາ ຈົ່ງຍອມ ອ່ອນນ້ອມເຊື່ອຟັງສາມີຂອງທ່ານຊຶ່ງເປັນສິ່ງ ເຫມາະສົມໃນອົງພຣະຜູ້ເປັນເຈົ້າ 19ຝ່າຍສາມີກໍຈົ່ງຮັກ
ພັນລະຍາຂອງທ່ານ, ແລະ ຢ່າເຮັດຮຸນແຮງຕໍ່ນາງ. 20ຝ່າຍບຸດທັງຫລາຍຈົ່ງເຊື່ອຟັງບິດາມານດາຂອງຕົນ,
ທຸກຢ່າງເພາະການນີ້ເປັນທີ່ພໍພຣະໄທຂອງອົງພຣະຜູ້ເປັນເຈົ້າ.
21ຝ່າຍບິດາມານດາກໍຢ່າກຸກກວນບຸດຂອງຕົນໃຫ້ຂັດເຄືອງໃຈເພື່ອວ່າພວກເຂົາຈະບໍ່ທໍ້ຖອຍໃຈ.
22ບັນດາຜູ້ຮັບໃຊ້,
ຈົ່ງເຊື່ອຟັງນາຍຂອງຕົນຕາມເນື້ອຫນັງທຸກສິ່ງບໍ່ແມ່ນຕາມຢ່າງຄົນທີ່ທຳແຕ່ຕໍ່ຫນ້າຢ່າງຄົນປະຈົບສໍພໍແຕ່ຈົ່ງເຮັດສິ່ງນັ້ນດ້ວຍຄວາມຈິງໃຈຈົ່ງຢຳເກງ
ອົງພຣະຜູ້ເປັນເຈົ້າ. 23ບໍ່ວ່າຈະເຮັດສິ່ງໃດກໍຕາມ, ຈົ່ງເຮັດດ້ວຍຄວາມເຕັມໃຈເໝືອນ
ເຮັດຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າບໍ່ແມ່ນເຮັດສຳລັບມະນຸດ.
24ເພາະທ່ານຮູ້ວ່າທ່ານຈະໄດ້ຮັບມໍຣະດົກຈາກອົງພຣະຜູ້ເປັນເຈົ້າເປັນຄ່າບຳເໜັດ ແລະ ຜູ້ທີ່ທ່ານຮັບໃຊ້ນັ້ນກໍແມ່ນອົງພຣະເຢຊູຄຣິດເຈົ້າ.
25ສ່ວນຜູ້ທີ່ເຮັດການຊົ່ວນັ້ນກໍຈະໄດ້ຮັບໂທດຕາມກຳຊົ່ວຂອງຕົນ ທີ່ໄດ້ກະທຳນັ້ນພຣະເຈົ້າຕັດສິນທຸກຄົນບໍ່ມີການເຫັນແກ່ໜ້າຜູ້ໃດເລີຍ.

 generated on Tue Jun 17 19:01:42 2025

4 1ຝ່າຍນາຍທັງຫລາຍກໍຈົ່ງປະຕິບັດຕໍ່ຄົນຮັບໃຊ້ຂອງຕົນຕາມຄວາມຖືກຕ້ອງ ແລະ ທ່ຽງທຳ.
ເພາະທ່ານຮູ້ວ່າທ່ານກໍມີນາຍອົງໜຶ່ງຢູ່ໃນສະຫວັນເໝືອນກັນ.

2ຈົ່ງອຸທິດຕົວໃນການ ພາວັນນາອະທິຖານ. ຈົ່ງເຝົ້າລະວັງຢູ່ໃນການນັ້ນດ້ວຍການຂອບພຣະຄຸນ. 3ຈົ່ງພາວັນນາອະທິຖານ
ເພື່ອພວກເຮົາດ້ວຍເພື່ອພຣະເຈົ້າ ຈະຊົງໂຜດໄຂປະຕູໄວ້ ສຳລັບພຣະທຳນັ້ນ, ໃຫ້ເຮົາກ່າວຄວາມຈິງອັນເລິກລັບຂອງ ພຣະເຢຊູຄຣິດເຈົ້າ,
ທີ່ຂ້າພະເຈົ້າຖືກຈຳຈ່ອງຢູ່ກໍເພາະເຫດນີ້ແຫຼະ. 4ແລະ ຈົ່ງອະທິຖານເພື່ອຂ້າພະເຈົ້າຈະໄດ້ກ່າວຂໍ້ເລິກລັບໄດ້ຢ່າງຊັດເຈນຕາມທີ່ເຮົາຄວນຈະກ່າວ.
5ຈົ່ງປະຕິບັດຕໍ່ຄົນພາຍນອກ ດ້ວຍໃຊ້ສະຕິປັນຍາໂດຍສວຍໂອກາດ. 6ໃຫ້ວາຈາຂອງທ່ານປະກອບດ້ວຍເມດຕາຄຸນຢູ່ສະເໝີ. ປະສົມດ້ວຍເກືອ,
ເພື່ອທ່ານຈະໄດ້ຮູ້ວ່າຈະຕອບໃຫ້ແກ່ແຕ່ລະຄົນຢ່າງໃດ.
7ຕີຂີໂກ ເປັນນ້ອງທີ່ຮັກ ແລະ ທັງເປັນ ຜູ້ທີ່ບົວລະບັດຢ່າງສັດຊື່ ແລະ ເປັນຜູ້ຮັບໃຊ້ຮ່ວມກັນກັບຂ້າພະເຈົ້າໃນອົງພຣະຜູ້ເປັນເຈົ້າ
ຈະບອກໃຫ້ທ່ານຮູ້ເຖິງເຫດການ ທັງໝົດທີ່ເກີດຂຶ້ນກັບຂ້າພະເຈົ້າ. 8ຂ້າພະເຈົ້າໃຊ້ລາວໄປຫາທ່ານກໍເພາະເຫດນີ້
ເພື່ອທ່ານຈະໄດ້ຮູ້ເລື່ອງລາວກ່ຽວກັບພວກເຮົາ ແລະ ເພື່ອໃຫ້ເຂົາຫນູນນ້ຳໃຈຂອງທ່ານ. 9ໂອເນຊີໂມຜູ້ເປັນນ້ອງທີ່ຮັກ ແລະ
ສັດຊື່ຊຶ່ງເປັນຜູ້ໜຶ່ງໃນພວກທ່ານໄປກັບດ້ວຍເຂົາທັງສອງຈະເລົ່າໃຫ້ທ່ານຮູ້ເຖິງທຸກສິ່ງທີ່ໄດ້ເກີດຂຶ້ນໃນທີ່ນີ້.
10ອາຣິດຕາໂຂ, ເພື່ອນຮ່ວມໃນການຖືກຈຳຈ່ອງກັບຂ້າພະເຈົ້າ, ຝາກຄວາມຄິດເຖິງມາຍັງທ່ານທັງຫລາຍເຊັ່ນດຽວກັນກັບມາຣະໂກ,
ລູກອ້າຍລູກນ້ອງຂອງບາຣະນາບາ (ທ່ານໄດ້ຮັບຄຳສັ່ງເຖິງ ເລື່ອງນີ້ແລ້ວວ່າຖ້າເຂົາມາຫາທ່ານ ກໍຈົ່ງຕ້ອນຮັບເຂົາ.) 11ແລະ ເຢຊູ
ເຊິ່ງມີອີກຊື່ຫນຶ່ງວ່າຢູສະໂຕ. ຄົນເຫລົ່ານີ້ເທົ່ານັ້ນທີ່ເປັນຄົນເຂົ້າພິທີຕັດໃນບັນດາ ເພື່ອນຮ່ວມງານຂອງຂ້າພະເຈົ້າເພື່ອອານາຈັກຂອງພຣະເຈົ້າ.
ແລະ ພວກເຂົາເປັນຜູ້ຊ່ວຍຊູໃຈຂ້າພະເຈົ້າ.
12ເອປາຟຣັດເປັນຄົນຫນຶ່ງໃນພວກເຈົ້າ ແລະ ເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດເຈົ້າກໍ ຝາກຄວາມຄິດເຖິງມາຍັງທ່ານເໝືອນກັນ.
ເພິ່ນສູ້ພາວັນນາອະທິຖານ ເພື່ອທ່ານຢູ່ສະເຫມີ, ເພື່ອໃຫ້ທ່ານຫມັ້ນຄົງຢູ່ຄົບຖ້ວນ ແລະ ເຕັມໄປດ້ວຍຄວາມຫມັ້ນໃຈຕາມນ້ຳພຣະໄທ
ທຸກຢ່າງຂອງພຣະເຈົ້າ. 13ຂ້າພະເຈົ້າເປັນພະຍານໃຫ້ເພິ່ນໄດ້ວ່າ ເພິ່ນໄດ້ເຮັດການຫນັກຫນ່ວງເພື່ອທ່ານ ແລະ ເພື່ອຄົນທີ່ຢູ່ເມືອງລາວດີເກອາ,
ແລະ ເພື່ອຄົນທີ່ຢູ່ເມືອງເຮຍຣາໂປລີ. 14ລູກາທ່ານຫມໍທີ່ຮັກ ແລະ ເດມາ ກໍຝາກຄວາມຄິດເຖິງມາຍັງພວກທ່ານ.
15ຈົ່ງທັກທາຍພວກພີ່ນ້ອງ ທີ່ຢູ່ໃນເມືອງລາວດີເກອາ, ແລະ ນາງນິມຟາ ກັບ ພີ່ນ້ອງຄຣິສຕຽນທີ່ຢູ່ໃນເຮືອນຂອງນາງດ້ວຍ.
16ເມື່ອພວກທ່ານໄດ້ອ່ານ ຈົດໝາຍ ສະບັບນີ້ ແລ້ວຈົ່ງສົ່ງຕໍ່ໄປໃຫ້ ພີ່ນ້ອງຄຣິສຕະຈັກທີ່ເຊື່ອຢູ່ໃນເມືອງ ລາວດີເກອາອ່ານດ້ວຍ ແລະ
ໃຫ້ທ່ານອ່ານຈົດໝາຍທີ່ສົ່ງມາຈາກເມືອງລາວດີເກອາ ເໝືອນກັນ. 17ໃຫ້ບອກອາຂີໂປວ່າ, “ການບົວລະບັດຮັບໃຊ້ອົງພຣະຜູ້ເປັນເຈົ້ານັ້ນ
ທ່ານຄວນເຮັດໃຫ້ບັນລຸຜົນສຳເລັດ.”
18ຄຳທັກທາຍນີ້ເປັນລາຍມືຂອງຂ້າພະເຈົ້າ ຄືໂປໂລ ຈົ່ງລະນຶກເຖິງໂສ້ທວນຂອງຂ້າພະເຈົ້າດ້ວຍ. ຂໍໃຫ້ພຣະຄຸນຈົ່ງສະຖິດຢູ່ກັບທ່ານດ້ວຍເທີ້ນ.

# 1 ເທສະໂລນິກ

1 1ໂປໂລ, ຊີລາ, ແລະ ຕີໂມທຽວ ເຖິງຄຣິສຕະຈັກເທສະໂລນິກໃນພຣະເຈົ້າ ພຣະບິດາ ແລະໃນອົງພຣະເຢຊູຄຣິດເຈົ້າ. ຂໍພຣະຄຸນ
ແລະສັນຕິສຸກຈົ່ງສະຖິດຢູ່ກັບທ່ານ.

2ພວກເຮົາຂອບພຣະຄຸນພຣະເຈົ້າສະເຫມີສຳລັບພວກທ່ານທຸກຄົນ, ເມື່ອພວກເຮົາລະນຶກເຖິງພວກທ່ານ ໃນຄຳອະທິຖານຂອງພວກເຮົາ.
3ພວກເຮົາລະນຶກເຖິງຢ່າງສະຫມ່ຳສະເຫມີຕໍ່ຫນ້າພຣະເຈົ້າ ແລະ ພຣະບິດາເຈົ້າ ເລື່ອງການງານແຫ່ງຄວາມເຊື່ອ,
ງານທີ່ພວກທ່ານທຸ້ມເທເຮັດດ້ວຍຄວາມຮັກ, ແລະ
ຄວາມອົດທົນຊຶ່ງເກີດມາຈາກຄວາມຫມັ້ນໃຈໃນອານາຄົດໃນອົງພຣະເຢຊູຄຣິດເຈົ້າຂອງເຮົາ.
4ອ້າຍນ້ອງຊາຍທັງຫລາຍ ຜູ້ເປັນທີ່ຮັກຂອງພຣະເຈົ້າ, ພວກເຮົາຮູ້ເຖິງການຊົງເອີ້ນຂອງພວກທ່ານ,
5ເພາະວ່າຂ່າວປະເສີດຂອງພວກເຮົາບໍ່ໄດ້ມາເຖິງທ່ານໂດຍຖ້ອຍຄຳເທົ່ານັ້ນ, ແຕ່ໂດຍຣິດອຳນາດ, ໃນພຣະວິນຍານບໍຣິສຸດເຈົ້າ, ແລະ
ຊຶ່ງຫມັ້ນຄົງເຊື່ອຖືໄດ້. ໃນທຳນອງດຽວກັນ, ພວກທ່ານຍັງຄົງຮູ້ວ່າ ເຮົາເປັນຄົນແບບໃດທ່າມກາງພວກທ່ານເພື່ອເປັນປະໂຫຍດແກ່ພວກທ່ານ.
6ທ່ານໄດ້ກາຍມາເປັນຜູ້ເຮັດຕາມແບບຢ່າງຂອງພວກເຮົາ ແລະ ຂອງອົງພຣະຜູ້ເປັນເຈົ້າ,
ເມື່ອທ່ານຮັບເອົາພຣະຄັມນັ້ນຢ່າງຍາກລຳບາກດ້ວຍຄວາມຊື່ນຊົມຍິນດີຈາກພຣະວິນຍານບໍຣິສຸດເຈົ້າ. 7ຜົນທີ່ໄດ້ຄື,
ພວກທ່ານໄດ້ກາຍມາເປັນແບບຢ່າງໃຫ້ກັບພີ່ນ້ອງໃນແຂວງມາຊີໂດເນັຽ ແລະ ແຂວງອາຄາຢາ ຜູ້ທີ່ເຊື່ອທຸກຄົນ.
8ເພາະຈາກພວກທ່ານ ຖ້ອຍຄຳຂອງພຣະເຈົ້າໄດ້ສົ່ງສຽງອອກໄປ, ແລະ ບໍ່ແມ່ນພຽງໃນມາຊີໂດເນັຽ ແລະ ອາຄາຢາເທົ່ານັ້ນ.
ແຕ່ຄວາມເຊື່ອຂອງພວກທ່ານໄດ້ກະຈາຍອອກໄປທຸກຫົນທຸກແຫ່ງ. ຈຶ່ງເປັນຜົນ, ພວກເຮົາບໍ່ຈຳເປັນຕ້ອງກ່າວສິ່ງໃດເລີຍ.
9ເພາະພວກເຂົາເອງໄດ້ລາຍງານເຖິງລັກສະນະການມາຂອງພວກເຮົາ ທີ່ມີໃນທ່າມກາງພວກທ່ານ.
ພວກເຂົາເລົ່າເຖິງການທີ່ທ່ານໄດ້ຫັນມາຫາພຣະເຈົ້າ ປະຖິ້ມຈາກຮູບເຄົາຣົບ ເພື່ອຮັບໃຊ້ພຣະເຈົ້າຊົງພຣະຊົນຢູ່ ແລະ ຜູ້ຊົງທ່ຽງແທ້.
10ພວກເຂົາລາຍງານວ່າພວກທ່ານກຳລັງລໍຄອຍພຣະບຸດຈາກສະຫວັນ, ຜູ້ທີ່ພຣະອົງຊົງເຮັດໃຫ້ເປັນຂຶ້ນມາຈາກຄວາມຕາຍ.
ຜູ້ນີ້ຄືພຣະເຢຊູຄຣິດເຈົ້າ, ຜູ້ທີ່ຊ່ວຍເຮົາໃຫ້ພົ້ນຈາກຄວາມໂກດຮ້າຍຂອງພຣະເຈົ້າທີ່ກຳລັງຈະມາເຖິງ.


generated on Tue Jun 17 19:01:42 2025

2 [1]ອ້າຍນ້ອງຊາຍເອີຍ, ສໍາລັບພວກທ່ານເອງຮູ້, ໃນການທີ່ພວກເຮົາມາຫາພວກທ່ານນັ້ນ ບໍ່ໄດ້ເສັຽປະໂຫຍດ.
[2]ພວກທ່ານຮູ້ວ່າກ່ອນຫນ້ານີ້ພວກເຮົາຕ້ອງທົນທຸກ ແລະ ຖືກປະຈານຢ່າງຫນ້າອັບອາຍທີ່ເມືອງຟີລິບປອຍ.
ພວກເຮົາມີຄວາມກ້າຫານໃນພຣະເຈົ້າຂອງເຮົາ ເພື່ອປະກາດຂ່າວປະເສີດຂອງພຣະເຈົ້າ ໃຫ້ແກ່ພວກທ່ານດ້ວຍຄວາມພາກພຽນພະຍາຍາມ.

[3]ເພາະວ່າຄໍາສອນຂອງພວກເຮົານັ້ນບໍ່ໄດ້ມາຈາກຄວາມຜິດພາດ, ຫລື ຈາກຄວາມບໍ່ຈິງ ຫລື ຈາກຄວາມຫລອກຫລວງ.
[4]ແຕ່ພວກເຮົາໄດ້ຮັບການພິສູດແລ້ວໂດຍພຣະເຈົ້າວ່າເປັນທີ່ໄວ້ໃຈໄດ້ດ້ວຍເລື່ອງຂ່າວປະເສີດ, ດັ່ງພວກເຮົາກ່າວນັ້ນ,
ພວກເຮົາບໍ່ໄດ້ເວົ້າດ້ວຍເພື່ອໃຫ້ມະນຸດພໍໃຈ, ແຕ່ເພື່ອໃຫ້ພຣະເຈົ້າພໍພຣະທັຍ. ພຣະອົງຄືຜູ້ດຽວທີ່ກວດສອບຫົວໃຈຂອງພວກເຮົາ.
[5]ຢ່າງທີ່ພວກທ່ານຮູ້ແລ້ວວ່າ, ສໍາລັບພວກເຮົາບໍ່ມີເວລາໃດເລີຍ ທີ່ຈະໃຊ້ຖ້ອຍຄໍາເພື່ອຍົກຍ້ອງ, ຫລື ກ່າວອ້າງດ້ວຍຄວາມໂລບ,
ໃນເມື່ອພຣະເຈົ້າຊົງເປັນພະຍານຂອງພວກເຮົາ.[6]ພວກເຮົາບໍ່ໄດ້ສະແຫວງຫາກຽດຈາກມະນຸດ, ຫລືຈາກພວກທ່ານ ຫລື ຈາກຄົນອື່ນໆ.
ພວກເຮົາສາມາດຮຽກຮ້ອງສິດທິພິເສດໃນຖານະເປັນອັກຄະສາວົກຂອງພຣະຄຣິດເຈົ້າ.
[7]ແຕ່ພວກເຮົາເປັນເຫມືອນຄົນຕ່າງຊາດໃນທ່າມກາງພວກທ່ານ ເຫມືອນແມ່ທີ່ຫນູນໃຈລູກຂອງຕົນ.[8]ເພາະເຫດນີ້ພວກເຮົາຈຶ່ງມີຄວາມຮັກ ແລະ
ຄວາມຫ່ວງໄຍພວກທ່ານ. ພວກເຮົາມີຄວາມສຸກທີ່ໄດ້ແບ່ງປັນກັບພວກທ່ານ ບໍ່ແມ່ນພຽງແຕ່ຂ່າວປະເສີດຂອງພຣະເຈົ້າເທົ່ານັ້ນ
ແຕ່ທັງຊີວິດຂອງພວກເຮົາເອງດ້ວຍ. ເພາະພວກທ່ານໄດ້ມາເປັນຜູ້ທີ່ພວກເຮົາຮັກຫລາຍ.[9]ສໍາລັບພວກທ່ານຈຶ່ງຈົດຈໍາໄວ້,
ອ້າຍນ້ອງຂອງເຮົາເອີຍ, ການທຸ້ມເທເຮັດວຽກ ແລະ ການອັນຫນັກຫນ່ວງຂອງພວກເຮົາ. ທຸກວັນ ແລະ
ຄືນພວກເຮົາກໍາລັງເຮັດວຽກເພື່ອຈະບໍ່ເປັນພາຣະອັນຫນັກແກ່ພວກທ່ານຄົນໃດ. ໃນຊ່ວງເວລານັ້ນ,
ພວກເຮົາໄດ້ເທສະຫນາຂ່າວປະເສີດຂອງພຣະເຈົ້າໃຫ້ກັບພວກທ່ານດ້ວຍ.
[10]ພວກທ່ານເປັນພະຍານ, ແລະ ພຣະເຈົ້າກໍຊົງເປັນພະຍານດ້ວຍເຖິງຄວາມບໍຣິສຸດ, ຄວາມຊອບທັມ, ແລະ
ປາສະຈາກການຕໍາຫນິໃນການປະພຶດຂອງພວກເຮົາທີ່ມີຕໍ່ພວກທ່ານທີ່ເຊື່ອ.[11]ໃນທໍານອງດຽວກັນ ພວກທ່ານຕ່າງກໍຮູ້ຈັກກັນເອງດີຢູ່ແລ້ວ
ດັ່ງນັ້ນໃນຖານະພໍ່ກັບລູກ,[12]ພວກເຮົາຈຶ່ງຮ້ອງຂໍທ່ານ ແລະ ຫນູນໃຈ ແລະ ເຕືອນສະຕິທ່ານ
ເພື່ອຈະເດີນຢູ່ໃນຄວາມປະພຶດອັນເຫມາະສົມຫນ້າຍົກຍ້ອງຂອງພຣະເຈົ້າ, ຜູ້ຊົງເອີ້ນພວກທ່ານ ເຂົ້າສູ່ອານາຈັກ ແລະ
ໃນສະຫງ່າຣາສີຂອງພຣະອົງ.
[13]ເນື່ອງຈາກເຫດຜົນນີ້ ພວກເຮົາຈຶ່ງຂອບພຣະຄຸນພຣະເຈົ້າຢ່າງສະຫມໍ່າສະເຫມີ, ດ້ວຍເຊັ່ນກັນ ເພາະເມື່ອພວກທ່ານໄດ້ຮັບຂ່າວສານ
ຂອງພຣະເຈົ້າທີ່ພວກທ່ານໄດ້ຍິນຈາກພວກເຮົາແລ້ວ, ພວກທ່ານໄດ້ຍອມຮັບແລ້ວ ບໍ່ແມ່ນໃນຖານະທີ່ເປັນຖ້ອຍຄໍາຂອງມະນຸດ.
ແຕ່ພວກທ່ານຮັບເອົາດ້ວຍວ່າເປັນພຣະຄັມຂອງພຣະເຈົ້າຢ່າງແທ້ຈິງ. ຄືພຣະຄັມນີ້ທີ່ກໍາລັງທໍາງານຢູ່ທ່າມກາງພວກທ່ານຜູ້ທີ່ເຊື່ອດ້ວຍ.
[14]ອ້າຍນ້ອງຊາຍເອີຍ, ເພາະພວກທ່ານໄດ້ກາຍເປັນຜູ້ຮຽນແບບຜູ້ເຊື່ອ ໃນຄຣິສຕະຈັກຂອງພຣະເຈົ້າໃນຢູດາຍໃນອົງພຣະເຢຊູຄຣິດເຈົ້າ.
ເພາະພວກທ່ານຕ້ອງທົນທຸກຢ່າງດຽວກັນຈາກຄົນໃນປະເທດຂອງທ່ານ, ເຫມືອນທີ່ພວກເຂົາໄດ້ຮັບຈາກພວກຢິວ.
[15]ຄືພວກຢິວທີ່ໄດ້ຂ້າທັງພຣະເຢຊູເຈົ້າ ແລະ ບັນດາຜູ້ປະກາດພຣະທັມ. ຄືພວກຊາວຢິວທີ່ໄດ້ຂັບໄລ່ພວກເຮົາ.
ພວກເຂົາບໍ່ໄດ້ເຮັດໃຫ້ພຣະເຈົ້າພໍໃຈ. ແຕ່ພວກເຂົາຂັດຄ້ານຄົນທັງຫລາຍ.[16]ພວກເຂົາຫ້າມບໍ່ໃຫ້ພວກເຮົາກ່າວຕໍ່ຄົນຕ່າງຊາດ
ເພື່ອຄົນເຫລົ່ານັ້ນຈະໄດ້ຮັບຄວາມລອດພົ້ນ. ຊຶ່ງມີຜົນເຮັດໃຫ້ພວກເຂົາເຕັມໄປດ້ວຍຄວາມບາບ.
ທ້າຍທີ່ສຸດຄວາມໂກດຮ້າຍຂອງພຣະເຈົ້າກໍມາເຖິງພວກເຂົາ.
[17]ອ້າຍນ້ອງຊາຍເອີຍ, ພວກເຮົາຖືກແຍກຂາດຈາກພວກທ່ານ, ໃນຊ່ວງເວລາຫນຶ່ງ, ຊຶ່ງເປັນການແຍກຂາດທາງກາຍບໍ່ແມ່ນຫົວໃຈ.
ພວກເຮົາເຮັດຢ່າງກະຕືລືລົ້ນ ໂດຍສະເພາະ ດ້ວຍຄວາມປາຖນາອັນຍິ່ງໃຫຍ່, ທີ່ຈະໄດ້ພົບຫນ້າພວກທ່ານ.
[18]ເພາະພວກເຮົາປາຖນາທີ່ຈະມາຫາພວກທ່ານ, ຂ້າພຣະເຈົ້າເອງຄືໂປໂລ ກໍປາຖນາທີ່ຈະມາຫາພວກທ່ານອີກເທື່ອຫນຶ່ງ,
ແຕ່ຊາຕານໄດ້ຢຸດຢັ້ງພວກເຮົາເອົາໄວ້.[19]ເພາະຄວາມຫມັ້ນໃຈຂອງພວກເຮົາສໍາລັບອານາຄົດ ຫລື ຄວາມຊື່ນຊົມຍິນດີ ຫລື
ມົງກຸດແຫ່ງຄວາມພູມໃຈຂອງພວກເຮົານັ້ນຢູ່ຕໍ່ຫນ້າອົງພຣະເຢຊູເຈົ້າໃນການມາຂອງພຣະອົງບໍ່ແມ່ນບໍ?
ບໍ່ແມ່ນພວກທ່ານບໍ່ທີ່ມີຫລາຍເຫມືອນຜູ້ອື່ນ?[20]ພວກທ່ານເປັນພຣະສີຣິ ແລະ ຄວາມຍິນດີຂອງພວກເຮົາ.

3 [1]ເພາະສະນັ້ນ, ເມື່ອພວກເຮົາບໍ່ສາມາດທົນແບກເອົາໄວ້ໄດ້ອີກຕໍ່ໄປແລ້ວ,
ພວກເຮົາຈຶ່ງຄິດວ່າເປັນການດີທີ່ຈະປະພວກເຮົາໄວ້ທີ່ນະຄອນເອແຖນໃຫ້ໂດດດ່ຽວ.[2]ພວກເຮົາຈຶ່ງສົ່ງຕີໂມທຽວ, ຜູ້ເປັນອ້າຍນ້ອງຂອງເຮົາ
ແລະ ເປັນເພື່ອນຮ່ວມງານເພື່ອພຣະເຈົ້າໃນຂ່າວປະເສີດຂອງພຣະຄຣິດເຈົ້າ, ເພື່ອມາເສີມກຳລັງ ແລະ
ຫນູນໃຈພວກທ່ານເນື່ອງຈາກຄວາມເຊື່ອຂອງພວກທ່ານ.[3]ພວກເຮົາໄດ້ເຮັດດັ່ງນີ້ ເພື່ອຈະບໍ່ມີໃຜສັ່ນສະເທືອນກັບຄວາມທຸກທໍຣະມານເຫລົ່ານີ້.
ສຳລັບພວກທ່ານກໍຮູ້ແລ້ວວ່າ ພວກເຮົາກະທຳເຊັ່ນນີ້ ເພາະພວກເຮົາໄດ້ຖືກແຕ່ງຕັ້ງ.

[4]ແທ້ຈິງແລ້ວ, ເມື່ອພວກເຮົາຢູ່ກັບພວກທ່ານ, ພວກເຮົາໄດ້ບອກພວກທ່ານລ່ວງຫນ້າແລ້ວວ່າພວກເຮົາຈະຕ້ອງທົນທຸກກັບຄວາມເຈັບປວດຕ່າງໆ,
ແລະ ສິ່ງນັ້ນກໍເກີດຂຶ້ນເຫມືອນຢ່າງທີ່ພວກທ່ານຮູ້ນັ້ນ.[5]ດ້ວຍເຫດຜົນນີ້, ເມື່ອຂ້າພຣະເຈົ້າບໍ່ສາມາດຢືນສູ້ຕໍ່ໄປໄດ້, ຂ້າພຣະເຈົ້າຈຶ່ງສົ່ງຄົນໄປ
ເພື່ອວ່າຂ້າພຣະເຈົ້າຈະໄດ້ຮູ້ກ່ຽວກັບຄວາມເຊື່ອຂອງພວກທ່ານ. ບາງເທື່ອເມື່ອຜູ້ທົດລອງໄດ້ເຂົ້າມາທົດລອງພວກທ່ານຢ່າງໃດຢ່າງຫນຶ່ງ, ແລະ
ການທຸ້ມເທໃນການງານຂອງພວກເຮົາຈະໄຮ້ປະໂຫຍດ.
[6]ແຕ່ຕີໂມທຽວໄດ້ເດີນທາງໄປຫາພວກເຮົາ ແລະ ໄດ້ນຳຂ່າວດີກ່ຽວກັບຄວາມເຊື່ອ ແລະ ຄວາມຮັກຂອງພວກທ່ານມາບອກແກ່ພວກເຮົາ.
ເພິ່ນໄດ້ບອກພວກເຮົາວ່າພວກທ່ານມີຄວາມຈົດຈຳທີ່ດີກ່ຽວກັບພວກເຮົາສະເຫມີ, ແລະ
ພວກທ່ານລໍຄອຍທີ່ຈະໄດ້ພົບພວກເຮົາເຫມືອນກັບທີ່ພວກເຮົາລໍຄອຍທີ່ຈະໄດ້ພົບພວກທ່ານ.[7]ເພາະເຫດນີ້, ອ້າຍນ້ອງຂອງເຮົາເອີຍ,
ພວກເຮົາຈຶ່ງໄດ້ຮັບການເລົ້າໂລມໃຈຈາກພວກທ່ານ ເນື່ອງດ້ວຍຄວາມເຊື່ອຂອງພວກທ່ານ, ໃນຄວາມທຸກ ແລະ
ຄວາມເຈັບປວດທັງຫມົດຂອງພວກເຮົາ.
[8]ຕອນນີ້ພວກເຮົາມີຊີວິດຢູ່ໄດ້, ຖ້າຫາກພວກທ່ານຍຶດຫມັ້ນໃນອົງພຣະຜູ້ເປັນເຈົ້າ.[9]ພວກເຮົາຈະມີຄຳຂອບຄຸນໃດນໍ ໃຫ້ແກ່ພຣະເຈົ້າ
ສຳລັບທ່ານ, ສຳລັບຄວາມຊື່ນຊົມຍິນດີທັງຫມົດຕໍ່ຫນ້າພຣະເຈົ້າທີ່ມີຕໍ່ທ່ານ?[10]ທຸກວັນ ແລະ ຄືນພວກເຮົາ ພາວະນາອະທິຖານຢ່າງຫນັກ
ເພື່ອຈະໄດ້ພົບຫນ້າຂອງພວກທ່ານ ແລະ ຈັດຕຽມສິ່ງທີ່ຂາດຢູ່ໃນຄວາມເຊື່ອຂອງພວກທ່ານໃຫ້ແກ່ພວກທ່ານ.
[11]ຂໍພຣະເຈົ້າພຣະບິດາ ແລະ ອົງພຣະເຢຊູເຈົ້າຂອງເຮົາ, ຊົງຈັດຕຽມຫົນທາງໃຫ້ແກ່ພວກເຮົາເພື່ອຈະໄປຫາພວກທ່ານ.
[12]ຂໍອົງພຣະຜູ້ເປັນເຈົ້າຊົງເພີ່ມພູນ ແລະ ຜູກພັນພວກທ່ານໃນຄວາມຮັກທີ່ມີຕໍ່ກັນແລະກັນ, ແລະ ໃນຄວາມຮັກທີ່ມີຕໍ່ຄົນທັງຫລາຍ,
ເຫມືອນຢ່າງທີ່ພວກເຮົາມີຕໍ່ພວກທ່ານ.[13]ຂໍພຣະອົງກະທຳສິ່ງນີ້ເພື່ອເສີມກຳລັງໃຈຂອງພວກທ່ານ, ໃຫ້ປາສະຈາກທີ່ຕິໃດໆ
ໃນຄວາມບໍຣິສຸດຕໍ່ພຣະເຈົ້າ ແລະ ພຣະບິດາເຈົ້າຂອງເຮົາໃນການສະເດັດມາ
ຂອງອົງພຣະເຢຊູຄຣິດເຈົ້າພ້ອມກັບບັນດາຜູ້ບໍຣິສຸດທັງຫມົດຂອງພຣະອົງ.


generated on Tue Jun 17 19:01:42 2025

4 [1]ສຸດທ້າຍນີ້, ອ້າຍນ້ອງທັງຫລາຍເອີຍ, ພວກເຮົາຂໍຫນູນໃຈ ແລະ ສອນທ່ານໃນອົງພຣະເຢຊູເຈົ້າ.
ເມື່ອທ່ານຮັບເອົາຄຳສັ່ງສອນຂອງພວກເຮົາກ່ຽວກັບວິທີການດຳເນີນຊີວິດ ແລະ ເປັນທີ່ພໍພຣະທັຍພຣະເຈົ້າ,
ເຊັ່ນກັນກັບການດຳເນີນໃນທາງນີ້ດ້ວຍ, ເພື່ອວ່າພວກທ່ານຈະເຮັດໄດ້ຫລາຍກວ່າເກົ່າອີກ.
[2]ເພາະພວກທ່ານຮູ້ເຖິງຄຳສັ່ງສອນທີ່ພວກເຮົາໃຫ້ແກ່ທ່ານໂດຍທາງພຣະເຢຊູຄຣິດເຈົ້າ.

[3]ເພາະນີ້ເປັນນ້ຳພຣະທັຍຂອງພຣະເຈົ້າ, ຄືຈົ່ງຊຳຣະຕົນໃຫ້ບໍຣິສຸດ, ເພື່ອພວກທ່ານຈະຫລີກຫນີຈາກຄວາມຜິດສິລະທັມທາງເພດ,
[4]ເພື່ອພວກທ່ານແຕ່ລະຄົນຈະຮູ້ຈັກດຳເນີນຕົວໃນທາງທີ່ບໍຣິສຸດ ແລະ ມີກຽດ,[5]ຢ່າມີໃຈປາຖນາອັນເກີດມາຈາກຕັນຫາ
(ເຫມືອນດັ່ງຄົນຕ່າງຊາດທີ່ບໍ່ຮູ້ຈັກກັບພຣະເຈົ້າ).[6]ຢ່າຍອມໃຫ້ມີຄົນໃດຝ່າຝືນ ແລະ ກະທຳຜິດຕໍ່ອ້າຍນ້ອງຂອງເຂົາໃນເລື່ອງນີ້.
ເພາະອົງພຣະຜູ້ເປັນເຈົ້າຊົງເປັນຜູ້ແກ້ແຄ້ນໃນສິ່ງຕ່າງໆເຫລົ່ານີ້, ເຫມືອນດັ່ງທີ່ພວກເຮົາໄດ້ເຕືອນ ແລະ ເປັນພະຍານຕໍ່ທ່ານກ່ອນແລ້ວ.
[7]ເພາະພຣະເຈົ້າບໍ່ໄດ້ເອີ້ນພວກເຮົາໃຫ້ເປັນມົນທິນ ແຕ່ໃຫ້ບໍຣິສຸດ.[8]ດ້ວຍເຫດນີ້, ຜູ້ໃດທີ່ປະຕິເສດສິ່ງນີ້ ບໍ່ໄດ້ປະຕິເສດມະນຸດ,
ແຕ່ໄດ້ປະຕິເສດພຣະເຈົ້າ, ຜູ້ຊົງປຣະທານພຣະວິນຍານບໍຣິສຸດໃຫ້ແກ່ພວກທ່ານ.
[9]ສຳລັບເລື່ອງທີ່ພວກທ່ານຮັກອ້າຍນ້ອງນັ້ນ, ພວກທ່ານບໍ່ຈຳເປັນໃຫ້ມີໃຜຂຽນບອກພວກທ່ານໃນເລື່ອງນີ້,
ເພາະພວກທ່ານເອງໄດ້ຮັບການຊົງສອນຈາກພຣະເຈົ້າໃຫ້ຮັກເຊິ່ງກັນ ແລະ ກັນ.[10]ແທ້ຈິງແລ້ວ,
ພວກທ່ານໄດ້ເຮັດສິ່ງນີ້ຕໍ່ພີ່ນ້ອງທັງຫມົດໃນແຂວງມາຊີໂດເນັຽ. ແຕ່ພີ່ນ້ອງທັງຫລາຍ ພວກເຮົາຂໍແນະນຳພວກທ່ານວ່າ
ຂໍໃຫ້ພວກທ່ານເຮັດໃຫ້ດີຂຶ້ນຕື່ມອີກ.[11]ພວກເຮົາຂໍແນະນຳໃຫ້ພວກທ່ານມີຄວາມປາຖນາ ທີ່ຈະໃຊ້ຊີວິດຢູ່ຢ່າງສະຫງົບ, ໃສ່ໃຈຕໍ່ທຸຣະກິດແລະ
ການງານຂອງພວກທ່ານ, ແລະ ເຮັດວຽກດ້ວຍເຫື່ອແຮງຂອງພວກທ່ານເອງ ເຫມືອນກັບທີ່ພວກເຮົາໄດ້ສັ່ງພວກທ່ານໃຫ້ເຮັດແລ້ວນັ້ນ,
[12]ເພື່ອພວກທ່ານຈະສາມາດດຳເນີນຊີວິດໃຫ້ເປັນທີ່ຫນ້າເຄົາຣົບນັບຖືຈາກຄົນພາຍນອກ ທີ່ຍັງບໍ່ເຊື່ອພຣະເຈົ້າ ແລະ
ເພື່ອພວກທ່ານຈະບໍ່ຂາດເຂີນສິ່ງໃດເລີຍ.
[13]ພວກເຮົາບໍ່ຕ້ອງການໃຫ້ພວກທ່ານເຂົ້າໃຈຜິດ, ອ້າຍນ້ອງທັງຫລາຍເອີຍ, ກ່ຽວກັບຄົນເຫລົ່ານັ້ນທີ່ຫລັບໄປນັ້ນ
ເພື່ອພວກທ່ານຈະບໍ່ຕ້ອງໂສກເສົ້າຄືກັບຄົນທີ່ເຫລືອຢູ່ ຊຶ່ງບໍ່ຮູ້ວ່າອັນໃດແນ່ນອນກ່ຽວກັບອານາຄົດ.[14]ເພາະຖ້າເຮົາເຊື່ອວ່າພຣະເຢຊູເຈົ້າໄດ້ຕາຍ
ແລະ ຊົງໄດ້ຄືນພຣະຊົນມາແລ້ວ, ດັ່ງນັ້ນພຣະເຈົ້າຈະຊົງນຳຄົນເຫລົ່ານັ້ນທີ່ລ່ວງລັບໄປແລ້ວໃນພຣະອົງໃຫ້ມາພ້ອມກັນກັບພຣະເຢຊູດ້ວຍ.
[15]ເພາະເຫດນີ້ ພວກເຮົາຈຶ່ງກ່າວແກ່ພວກທ່ານໂດຍພຣະທັມຂອງພຣະເຈົ້າ, ວ່າພວກເຮົາທີ່ຍັງມີຊີວິດຢູ່, ພວກເຮົາທີ່ຖືກປະເອົາໄວ້
ເມື່ອພຣະເຢຊູສະເດັດກັບມາ, ຈະບໍ່ລ່ວງຫນ້າໄປກ່ອນຄົນເຫລົ່ານັ້ນທີ່ເຜີຫລັບໄປແລ້ວ.
[16]ເພາະພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສະຫວັນ. ພຣະອົງຈະສະເດັດມາດ້ວຍສຽງອັນດັງ, ດ້ວຍສຽງຂອງຫົວໜ້າທູດສະຫວັນ,
ດ້ວຍສຽງແກຂອງພຣະເຈົ້າ, ແລະ ຄົນທີ່ຕາຍແລ້ວໃນພຣະຄຣິດເຈົ້າຈະຖືກເຮັດໃຫ້ເປັນຄືນມາຈາກຕາຍກ່ອນ.
[17]ຈາກນັ້ນພວກເຮົາຜູ້ຊຶ່ງຍັງມີຊີວິດຢູ່, ຜູ້ທີ່ຖືກປະໄວ້ ຈະຖືກຮັບໄປໃນເມກ ພ້ອມກັນກັບພວກເຂົາ
ເພື່ອໄປພົບກັບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ. ດ້ວຍເຫດນີ້ພວກເຮົາຈະໄດ້ຢູ່ກັບພຣະຜູ້ເປັນເຈົ້າຂອງພວກເຮົາສະເຫມີໄປ.
[18]ເພາະສະນັ້ນຈົ່ງຫນູນໃຈກັນ ແລະ ກັນດ້ວຍຖ້ອຍຄຳເຫລົ່ານີ້ເຖີ້ນ.

5
[1]ພີ່ນ້ອງທັງຫລາຍ, ບັດນີ້ກ່ຽວກັບເລື່ອງເວລາ ແລະ ວາລະຕ່າງໆນັ້ນ, ທ່ານບໍ່ຈຳເປັນຈະຕ້ອງມີສິ່ງໃດຂຽນເຖິງພວກທ່ານອີກ.
[2]ເພາະພວກທ່ານຮູ້ດີແລ້ວວ່າວັນຂອງອົງພຣະຜູ້ເປັນເຈົ້າກຳລັງໃກ້ເຂົ້າມາແລ້ວເຫມືອນຂະໂມຍມາໃນເວລາກາງຄືນ.[3]ເມື່ອພວກເຂົາເວົ້າກັນວ່າ
"ສະຫງົບສຸກ ແລະ ປອດພັຍແລ້ວ", ເມື່ອນັ້ນຄວາມພິນາດຈິບຫາຍຈະມາເຖິງພວກເຂົາທັນທີ
ເຫມືອນດັ່ງຄວາມເຈັບປວດຂອງຍິງຖືພາທີ່ກຳລັງຈະເກີດລູກ. ພວກເຂົາຈະບໍ່ມີທາງຫນີພົ້ນໄດ້ເລີຍ.

[4]ອ້າຍນ້ອງທັງຫລາຍ, ແຕ່ພວກທ່ານບໍ່ໄດ້ຢູ່ໃນຄວາມມືດ ເພື່ອວັນນັ້ນຈະບໍ່ມາຫລອນໃສ່ພວກທ່ານເຫມືອນຂະໂມຍມາ.
[5]ເພາະພວກທ່ານເປັນລູກແຫ່ງຄວາມສະຫວ່າງ ແລະ ເປັນລູກແຫ່ງກາງເວັນ. ບໍ່ແມ່ນເປັນລູກແຫ່ງກາງຄືນ ແລະ
ຄວາມມືດ[6]ແຕ່ຂໍໃຫ້ພວກເຮົາຢ່າເຜີຫລັບນອນດັ່ງຄົນອື່ນ. ໃຫ້ເຝົ້າຣະວັງຢູ່ ແລະ ມີສະຕິໃຫ້ດີ.[7]ເພາະຄົນເຫລົ່ານັ້ນ
ຊຶ່ງນອນຫລັບໃນເວລາກາງຄືນ, ແລະ ເມົາເຫລົ້າໃນເວລາກາງຄືນ.
[8]ແຕ່ໃນເມື່ອພວກເຮົາເປັນລູກຂອງກາງເວັນ, ຂໍໃຫ້ພວກເຮົາຢູ່ຢ່າງມີສະຕິ ແລະ ຂໍໃຫ້ພວກເຮົາສວມຄວາມເຊື່ອ ແລະ
ຄວາມຮັກເປັນເຄື່ອງປ້ອງກັນເອິກ, ແລະ ສວມຫມວກເຫລັກຄືຄວາມແນ່ໃຈໃນຄວາມລອດພົ້ນໃນອານາຄົດຂອງພວກເຮົາ.
[9]ເພາະພຣະເຈົ້າບໍ່ໄດ້ກຳຫນົດໃຫ້ພວກເຮົາຕ້ອງພົບກັບຄວາມໂກດຮ້າຍຂອງພຣະເຈົ້າ,
ແຕ່ໃຫ້ພວກເຮົາໄດ້ຮັບຄວາມລອດພົ້ນໂດຍຜ່ານທາງພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ.
[10]ຄືພຣະອົງຜູ້ຊຶ່ງຍອມຕາຍເພື່ອພວກເຮົາ, ບໍ່ວ່າພວກເຮົາຈະຕື່ນຢູ່ ຫລື ນອນຫລັບ
ພວກເຮົາກໍ່ຈະມີຊີວິດຢູ່ກັບພຣະອົງ[11]ເພາະສະນັ້ນຈົ່ງຫນູນໃຈກັນ ແລະ ກັນ ແລະ ເສີມສ້າງກັນ ແລະ
ກັນຂຶ້ນເຫມືອນຢ່າງທີ່ພວກທ່ານກຳລັງເຮັດຢູ່ນັ້ນ.
[12]ອ້າຍນ້ອງທັງຫລາຍ, ພວກເຮົາຂໍໃຫ້ພວກທ່ານຍອມຮັບຄົນເຫລົ່ານັ້ນ ທີ່ທຳງານຫນັກທ່າມກາງທ່ານ ແລະ
ຄົນທີ່ດູແລພວກທ່ານໃນອົງພຣະຜູ້ເປັນເຈົ້າ ແລະ ຄອຍຖ້າຕັກເຕືອນພວກທ່ານ.
[13]ພວກເຮົາຂໍໃຫ້ພວກທ່ານສະແດງຄວາມເຄົາຣົບຢ່າງສູງຕໍ່ພວກເພິ່ນດ້ວຍຄວາມຮັກ ເພາະການງານຂອງພວກເພິ່ນ
ພວກທ່ານຈົ່ງຢູ່ຮ່ວມກັນຢ່າງສະຫງົບສຸກ.[14]ອ້າຍນ້ອງທັງຫລາຍ, ພວກເຮົາຂໍແນະນຳພວກທ່ານໃຫ້ຕັກເຕືອນຄົນທີ່ສ້າງຄວາມວຸ້ນວາຍ,
ຫນູນໃຈຄົນທີ່ທໍ້ກຳລັງໃຈ, ຊ່ວຍເຫລືອຄົນທີ່ອ່ອນແອ, ແລະຈົ່ງອົດທົນຕໍ່ທຸກໆຄົນ.
[15]ຈົ່ງເຝົ້າເບິ່ງວ່າຈະບໍ່ມີໃຜທີ່ຕອບແທນຄວາມຮ້າຍດ້ວຍຄວາມຮ້າຍ. ແຕ່ໃຫ້ຍຶດຫມັ້ນໃນສິ່ງດີຕໍ່ກັນ ແລະ ຕໍ່ຄົນທັງຫລາຍ.
[16]ຈົ່ງຊື່ນຊົມຍິນດີທຸກເວລາ.[17]ຈົ່ງອະທິຖານສະຫມໍ່າສະເຫມີ ຢ່າຢຸດ.[18]ຈົ່ງໂມທະນາຂອບພຣະຄຸນໃນທຸກສິ່ງ. ເພາະເຫດນີ້ແຫລະ
ເປັນນ້ຳພຣະທັຍຂອງພຣະເຈົ້າໃນພຣະເຢຊູຄຣິດເຈົ້າສຳລັບພວກທ່ານ.
[19]ຢ່າຣະງັບພຣະວິນຍານ.[20]ຢ່າຫມິ່ນປະຫມາດຄຳທຳນວາຍ.[21]ຈົ່ງພິສູດທຸກສິ່ງ.
ຈົ່ງຍຶດຫມັ້ນໃນສິ່ງທີ່ດີກວ່າ[22]ຈົ່ງຫລີກຫນີຈາກການກະທຳຊົ່ວຮ້າຍທຸກຮູບແບບ.
[23]ຂໍພຣະເຈົ້າແຫ່ງສັນຕິສຸກເຮັດໃຫ້ທ່ານບໍຣິສຸດຢ່າງສົມບູນ. ຂໍໃຫ້ທັງວິນຍານຈິດໃຈແລະ
ຮ່າງກາຍຂອງພວກທ່ານໄດ້ຮັບການປົກປ້ອງໂດຍປາສະຈາກຄວາມຜິດເພື່ອການສະເດັດມາຂອງອົງພຣະເຢຊູຄຣິດເຈົ້າຂອງເຮົາ[24]ຜູ້ສັດຊື່ຄືພຣະອົງຜູ້ຊຶ່ງເອີ້ນທ່ານ,
ພຣະອົງຜູ້ດຽວຈະເຮັດຢ່າງນັ້ນດ້ວຍ.
[25]ອ້າຍນ້ອງທັງຫລາຍ, ຈົ່ງອະທິຖານເພື່ອພວກເຮົາ.[26]ຈົ່ງທັກທາຍພີ່ນ້ອງທຸກຄົນດ້ວຍຮອຍຈູບອັນບໍຣິສຸດ.
[27]ຂ້າພຣະເຈົ້າຂໍຮ້ອງພວກທ່ານໃນອົງພຣະຜູ້ເປັນເຈົ້າໃຫ້ອ່ານຈົດຫມາຍນີ້ ໃຫ້ກັບພີ່ນ້ອງທຸກຄົນຟັງ[28]ຂໍພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າ
ດຳຣົງຢູ່ກັບພວກທ່ານເຖີ້ນ.

# 2 ເທສະໂລນິກ

1 [1]ໂປໂລ, ຊີລາ, ແລະ ຕີໂມທຽວ, ເຖິງຄຣິສຕະຈັກທີ່ເມືອງເທສະໂລນິກໃນພຣະເຈົ້າພຣະບິດາຂອງເຮົາ ແລະ ອົງພຣະເຢຊູຄຣິດເຈົ້າ.
[2]ຂໍພຣະຄຸນ ແລະ ສັນຕິສຸກຈາກພຣະເຈົ້າພຣະບິດາຂອງເຮົາ ແລະ ອົງພຣະເຢຊູຄຣິດເຈົ້າ ຈົ່ງມີຢູ່ກັບທ່ານທັງຫລາຍເຖີ້ນ.

[3]ພວກເຮົາຄວນໂມທະນາຂອບພຣະຄຸນພຣະເຈົ້າສຳລັບພວກທ່ານສະເຫມີ, ອ້າຍນ້ອງທັງຫລາຍເອີຍ. ສຳລັບສິ່ງນີ້ເປັນສິ່ງທີ່ເຫມາະສົມ,
ເພາະຄວາມເຊື່ອຂອງທ່ານກໍ່ເຕີບໂຕຂຶ້ນຫລາຍ, ແລະ ຄວາມຮັກຂອງແຕ່ລະຄົນໃນພວກທ່ານທີ່ມີຕໍ່ກັນຫລາຍເຊັ່ນກັນ.
[4]ດັ່ງນັ້ນພວກເຮົາຈຶ່ງອວດເລື່ອງຂອງທ່ານຕໍ່ຄຣິສຕະຈັກອື່ນໆຂອງພຣະເຈົ້າ. ພວກເຮົາເວົ້າກ່ຽວກັບຄວາມອົດທົນ ແລະ
ຄວາມເຊື່ອຂອງພວກທ່ານໃນການຂົ່ມເຫັງທັງຫມົດທີ່ພວກທ່ານໄດ້ຮັບ. ພວກເຮົາເວົ້າເຖິງຄວາມຍາກລຳບາກທີ່ທ່ານຕ້ອງທົນ.
[5]ນີ້ເປັນຫມາຍສຳຄັນຂອງການພິພາກສາອັນຊອບທັມຂອງພຣະເຈົ້າ.
ຜົນກໍ່ຄືທ່ານຈະໄດ້ເປັນຄົນທີ່ເຫມາະສົມສຳລັບຣາຊະອານາຈັກຂອງພຣະເຈົ້າສຳລັບການທີ່ທ່ານທົນທຸກ.
[6]ມັນເປັນຄວາມຊອບທັມຂອງພຣະເຈົ້າທີ່ຈະໃຫ້ທຸກສະຫນອງແກ່ຄົນທີ່ໃຫ້ທຸກແກ່ທ່ານ,[7]ແລະ ການບັນເທົາທຸກມີແກ່ທ່ານ
ຜູ້ຊຶ່ງໄດ້ທົນທຸກລຳບາກກັບພວກເຮົາ.
ພຣະອົງຈະຊົງເຮັດຢ່າງນີ້ເມື່ອພຣະເຢຊູເຈົ້າສະເດັດມາຈາກສະຫວັນພ້ອມກັບທູດສະຫວັນແຫ່ງຣິດອຳນາດຂອງພຣະອົງ.
[8]ໃນໄຟນາຣົກອັນຮ້ອນກ້າ ພຣະອົງຈະແກ້ແຄ້ນຄົນທີ່ບໍ່ຮູ້ຈັກພຣະເຈົ້າ ແລະ
ຄົນທີ່ບໍ່ຕອບສະຫນອງໃນຂ່າວປະເສີດຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ.


generated on Tue Jun 17 19:01:42 2025

9 ພວກເຂົາຈະທົນທຸກກັບການຖືກລົງໂທດ ອັນເປັນຄວາມຈິບຫາຍນິຣັນດອນ ຖືກຕັດຂາດຈາກການຊົງສະຖິດຂອງພຣະຜູ້ເປັນເຈົ້າ ແລະ
ຈາກພຣະສະຫງ່າຣາສີແຫ່ງຣິດອຳນາດຂອງພຣະອົງ. 10 ພຣະອົງຈະເຮັດເຊັ່ນນີ້ ເມື່ອພຣະອົງສະເດັດກັບມາໃນວັນນັ້ນ ເພື່ອທີ່ຈະໄດ້ຮັບກຽດ
ທ່າມກາງຄົນຂອງພຣະອົງ ແລະ ເປັນທີ່ອັດສະຈັນໃຈໃນທ່າມກາງທຸກຄົນທີ່ເຊື່ອ. ເພາະທ່ານເຊື່ອຄຳພະຍານທີ່ເຮົາໄດ້ໃຫ້ແກ່ທ່ານແລ້ວ.
11 ດ້ວຍເຫດນີ້ ເຮົາຈຶ່ງອະທິຖານເພື່ອທ່ານຢ່າງເປັນປະຈຳ. ພວກເຮົາອະທິຖານວ່າ ພຣະເຈົ້າຂອງເຮົາຈະເຫັນວ່າທ່ານຄູ່ຄວນແກ່ການຊົງເອີ້ນ.
ພວກເຮົາອະທິຖານເພື່ອທີ່ວ່າພຣະອົງຈະຊົງກະທຳໃຫ້ຄວາມປາຖນາແຫ່ງຄວາມດີທຸກຢ່າງ
ແລະຄວາມປາຖນາທີ່ຈະເຮັດການງານແຫ່ງຄວາມເຊື່ອທຸກຢ່າງສຳເລັດລຸລ່ວງໄປໄດ້ດ້ວຍຣິດອຳນາດ.
12 ພວກເຮົາອະທິຖານໃນສິ່ງເຫລົ່ານີ້ເພື່ອທີ່ວ່າພຣະນາມຂອງອົງພຣະເຢຊູຄຣິດເຈົ້າຈະໄດ້ຮັບກຽດຜ່ານທາງທ່ານ.
ພວກເຮົາອະທິຖານເພື່ອທີ່ວ່າທ່ານຈະໄດ້ຮັບກຽດໂດຍທາງພຣະອົງ, ເພາະພຣະຄຸນຂອງພຣະເຈົ້າ ແລະ
ອົງພຣະເຢຊູຄຣິດເຈົ້າຂອງພວກເຮົາທັງຫລາຍ.

 generated on Tue Jun 17 19:01:42 2025

2 [1]ບັດນີ້ກ່ຽວກັບເລື່ອງການສະເດັດມາຂອງອົງພຣະເຢຊູຄຣິດເຈົ້າ ພຣະເຈົ້າຂອງເຮົາ ແລະ
ການທີ່ພຣະອົງໄດ້ຮວບຮວມພວກເຮົາທັງຫມົດໃຫ້ມາຢູ່ຮ່ວມກັນກັບພຣະອົງນັ້ນ: ເຮົາຂໍຮ້ອງພວກທ່ານ, ອ້າຍນ້ອງທັງຫລາຍເອີຍ,
[2]ຢ່າໃຫ້ໃຈຂອງທ່ານຫວັ່ນໄຫວງ່າຍ ຫລື ຕື່ນຕົກໃຈ, ບໍ່ວ່າຈະໂດຍວິນຍານ, ໂດຍຂໍ້ຄວາມ, ຫລື ໂດຍຈົດຫມາຍຫນຶ່ງ
ທີ່ເບິ່ງເຫມືອນວ່າຈະມາຈາກພວກເຮົາ, ຊຶ່ງອ້າງວ່າວັນຂອງພຣະຜູ້ເປັນເຈົ້າໄດ້ມາເຖິງແລ້ວ.

[3]ຢ່າໃຫ້ໃຜລໍ້ລວງທ່ານ ບໍ່ວ່າຈະໃນທາງໃດ. ເພາະວັນນັ້ນຈະບໍ່ມາເຖິງຈົນກວ່າຜູ້ຕໍ່ຕ້ານຈະມາ, ແລະ ຄົນນອກກົດຫມາຍໄດ້ເປີດເຜີຍ,
ຄືລູກແຫ່ງຄວາມພິນາດຈິບຫາຍ.[4]ຊຶ່ງເປັນຄົນທີ່ຕໍ່ຕ້ານແລະ ຍົກຍ້ອງຕົນເອງຂຶ້ນ ເພື່ອເປັນປໍຣະປັກກັບທຸກສິ່ງທີ່ເອີ້ນວ່າພຣະເຈົ້າ ຫລື
ເປັນທີ່ນະມັດສະການ. ຜົນທີ່ຕາມມາຄື, ເຂົານັ່ງໃນວິຫານຂອງພຣະເຈົ້າ ແລະ ສະແດງຕົນເອງວ່າເປັນດັ່ງພຣະເຈົ້າ.
[5]ທ່ານຈື່ບໍ່ໄດ້ບໍ ຕອນທີ່ຂ້າພຣະເຈົ້າຢູ່ກັບທ່ານ ຂ້າພຣະເຈົ້າໄດ້ບອກທ່ານເຖິງສິ່ງເຫລົ່ານີ້?[6]ຕອນນີ້ທ່ານຮູ້ແລ້ວວ່າແມ່ນຫຍັງກີດກັ້ນເຂົາໄວ້,
ເພື່ອຈະໃຫ້ເປີດເຜີຍຕົວໄດ້ ພຽງແຕ່ໃນເວລາທີ່ເຫມາະສົມເທົ່ານັ້ນ.[7]ເພາະຄວາມເລິກລັບຂອງການເປັນຄົນບໍ່ເຄົາຣົບກົດຫມາຍ,
ກໍາລັງທໍາງານຢູ່ຈຶ່ງຕ້ອງມີບາງຄົນທີ່ກີດກັ້ນເຂົາໄວ້ໃນຕອນນີ້ເທົ່ານັ້ນ ຈົນກວ່າເຂົາຈະຖືກກໍາຈັດໄປ.
[8]ແລ້ວພວກຄົນທີ່ບໍ່ເຄົາຣົບກົດຫມາຍຈະໄດ້ເປີດເຜີຍອອກມາ, ຄືຄົນທີ່ພຣະເຢຊູຄຣິດເຈົ້າຈະປະຫານດ້ວຍລົມຫາຍໃຈຈາກປາກຂອງພຣະອົງ.
ອົງພຣະຜູ້ເປັນເຈົ້າຈະກໍາຈັດມັນໃຫ້ຫມົດໄປໂດຍການສໍາແດງເຖິງການສະເດັດມາຂອງພຣະອົງ.
[9]ການມາຂອງຄົນທີ່ບໍ່ເຄົາຣົບກົດຫມາຍກໍເປັນເພາະການງານຂອງຊາຕານໂດຍຣິດອໍານາດ, ຫມາຍສໍາຄັນ, ແລະ ການອັດສະຈັນບໍ່ຈິງທັງຫມົດ,
[10]ແລະ ໂດຍການຫລອກລວງທັງຫມົດແຫ່ງຄວາມອະທັມ ສິ່ງເຫລົ່ານີ້ຈະມີໄວ້ສໍາລັບຄົນທີ່ກໍາລັງຈະພິນາດຈິບຫາຍ,
ເພາະພວກເຂົາບໍ່ໄດ້ຮັບຄວາມຮັກແຫ່ງຄວາມຈິງເພື່ອທີ່ພວກເຂົາຈະລອດພົ້ນໄດ້.
[11]ດ້ວຍເຫດຜົນນີ້ ພຣະເຈົ້າຈຶ່ງໃຫ້ການງານແຫ່ງຄວາມຜິດພາດເກີດຂຶ້ນກັບພວກເຂົາ ເພື່ອທີ່ພວກເຂົາຈະໄດ້ເຊື່ອຄໍາຂີ້ຕົວະ.
[12]ຜົນຄືພວກເຂົາທຸກຄົນຈະຕ້ອງຖືກພິພາກສາ, ຄືຄົນທີ່ບໍ່ເຊື່ອໃນຄວາມຈິງ ແຕ່ເລືອກທີ່ຈະຍິນດີໃນຄວາມອະທັມ.
[13]ແຕ່ພວກເຮົາຄວນ ໂມທະນາຂອບພຣະຄຸນພຣະເຈົ້າສະເຫມີສໍາລັບທ່ານ, ອ້າຍນ້ອງ ຜູ້ເປັນທີ່ຮັກຂອງອົງພຣະຜູ້ເປັນເຈົ້າ.
ເພາະສໍາລັບພຣະເຈົ້າໄດ້ຊົງເລືອກທ່ານໃນຖານະທີ່ເປັນຜົນແລກແຫ່ງຄວາມລອດພົ້ນໃນການຊໍາຣະໃຫ້ບໍຣິສຸດຂອງພຣະວິນຍານ ແລະ
ການເຊື່ອໃນຄວາມຈິງ,
[14]ນີ້ເປັນສິ່ງທີ່ພຣະອົງໄດ້ຊົງເອີ້ນທ່ານໂດຍຜ່ານທາງຂ່າວປະເສີດຂອງເຮົາເພື່ອໃຫ້ໄດ້ຮັບພຣະສະງ່າຣາສີແຫ່ງອົງພຣະເຢຊູຄຣິດເຈົ້າຂອງເຮົາ.
[15]ດັ່ງນັ້ນ, ພີ່ນ້ອງທັງຫລາຍ ຈົ່ງຕັ້ງຫມັ້ນຄົງຢູ່ ແລະ ຍຶດຖືເອົາຄວາມຈິງເຫລົ່ານັ້ນທີ່ພວກທ່ານໄດ້ຮຽນຈາກເຮົາ, ທັງທາງຖ້ອຍຄໍາ ຫລື
ໂດຍທາງຈົດຫມາຍ.
[16]ຂໍໃຫ້ພຣະເຢຊູຄຣິດເຈົ້າຂອງເຮົາ ແລະພຣະເຈົ້າພຣະບິດາຂອງເຮົາຜູ້ໄດ້ຊົງຮັກເຮົາ ແລະປຣະທານການຫນູນໃຈນິຣັນດອນ ແລະ
ຄວາມເຊື່ອຫມັ້ນທີ່ດີສໍາລັບອານາຄົດໂດຍຜ່ານທາງພຣະຄຸນແກ່ເຮົາ,[17]ການຫນູນໃຈ ແລະ ເສີມສ້າງຫົວໃຈຂອງທ່ານໃຫ້ຫມັ້ນຄົງໃນການງານ
ແລະ ຖ້ອຍຄໍາອັນດີທຸກປະການ.


generated on Tue Jun 17 19:01:42 2025

3 [1]ບັດນີ້, ພີ່ນ້ອງທັງຫລາຍເອີຍ, ຈົ່ງອະທິຖານເພື່ອພວກເຮົາ, ທີ່ພຣະທັມຂອງອົງພຣະຜູ້ເປັນເຈົ້າຈະໄດ້ຮັບການປະກາດອອກໄປຢ່າງໄວວາ
ແລະ ໄດ້ຖວາຍກຽດ, ຢ່າງທີ່ໄດ້ເກີດຂຶ້ນກັບພວກທ່ານ.[2]ຈົ່ງອະທິຖານເພື່ອໃຫ້ເຮົາໄດ້ຮັບການປົດປ່ອຍຈາກຄົນພານ ແລະ ຄົນຊົ່ວຮ້າຍ,
ເພາະບໍ່ແມ່ນວ່າທຸກຄົນມີຄວາມເຊື່ອ.[3]ແຕ່ອົງພຣະຜູ້ເປັນເຈົ້າຊົງສັດຊື່, ພຣະອົງຈະເສີມສ້າງທ່ານ ແລະປ້ອງກັນທ່ານໄວ້ຈາກມານຮ້າຍ.

[4]ພວກເຮົາມີຄວາມເຊື່ອຫມັ້ນໃນອົງພຣະຜູ້ເປັນເຈົ້າກ່ຽວກັບທ່ານ, ວ່າທ່ານທັງສອງກໍາລັງເຮັດ ແລະ ຈະເຮັດຕໍ່ໄປໃນສິ່ງທີ່ເຮົາສັ່ງ.
[5]ຂໍພຣະເຈົ້ານໍາຫົວໃຈຂອງທ່ານໃຫ້ເຂົ້າເຖິງຄວາມຮັກຂອງພຣະເຈົ້າ ແລະ ຄວາມອົດທົນຂອງພຣະຄຣິດເຈົ້າ.
[6]ດຽວນີ້, ພີ່ນ້ອງທັງຫລາຍ, ພວກເຮົາສັ່ງທ່ານໃນພຣະນາມຂອງພຣະເຢຊູຄຣິດເຈົ້າ,
ວ່າໃຫ້ທ່ານຫລີກຫນີອອກຈາກພີ່ນ້ອງທຸກຄົນທີ່ຢູ່ຢ່າງກຽດຄ້ານ ແລະ ບໍ່ໄດ້ປະຕິບັດຕາມທໍານຽມທີ່ເຮົາໄດ້ສອນທ່ານໄວ້.
[7]ເປັນສິ່ງເຫມາະສົມທີ່ທ່ານຈະເຮັດຕາມແບບຢ່າງຂອງເຮົາ. ພວກເຮົາບໍ່ໄດ້ໃຊ້ຊີວິດຢູ່ທ່າມກາງພວກທ່ານເຫມືອນຄົນທີ່ບໍ່ມີວິໄນ.
[8]ພວກເຮົາບໍ່ໄດ້ກິນອາຫານຂອງໃຜໂດຍທີ່ບໍ່ໄດ້ຈ່າຍເງິນ. ແຕ່ເຮົາເຮັດວຽກຫນັກທັງເວັນ ແລະ ຄືນ ດ້ວຍຄວາມຍາກລໍາບາກ,
ເພື່ອທີ່ເຮົາຈະບໍ່ເປັນພາຣະຜູ້ໃດໃນພວກທ່ານ.[9]ເຮົາເຮັດຢ່າງນີ້ບໍ່ແມ່ນເພາະເຮົາບໍ່ມີອໍານາດ
ແຕ່ເຮົາທໍາຢ່າງນີ້ເພື່ອທີ່ຈະໄດ້ເປັນແບບຢ່າງແກ່ພວກທ່ານ, ເພື່ອທີ່ທ່ານຈະໄດ້ເຮັດຕາມແບບຢ່າງຂອງເຮົາ.
[10]ເມື່ອເຮົາຢູ່ກັບພວກທ່ານ, ເຮົາສັ່ງພວກທ່ານວ່າ "ຖ້າໃຜບໍ່ຢາກຈະເຮັດວຽກ,
ຄົນນັ້ນກໍບໍ່ຄວນກິນ"[11]ເພາະເຮົາໄດ້ຍິນວ່າມີບາງຄົນໃຊ້ຊີວິດຢ່າງຂີ້ຄ້ານທ່າມກາງພວກທ່ານ. ພວກເຂົາບໍ່ເຮັດວຽກແຕ່
ມັກຫຍຸ້ງກ່ຽວກັບເລື່ອງຂອງຄົນອື່ນ.[12]ເຮົາສັ່ງ ແລະ ເຕືອນສະຕິຄົນເຊັ່ນນັ້ນ ໃນອົງພຣະເຢຊູຄຣິດເຈົ້າວ່າ
ພວກເຂົາຄວນຈະທໍາງານດ້ວຍຄວາມສະຫງົບ ແລະ ຫາລ້ຽງຊີບຕົນເອງ.
[13]ແຕ່ຝ່າຍທ່ານ, ອ້າຍນ້ອງທັງຫລາຍ, ຢ່າສູນເສັຽກໍາລັງໃຈໃນການເຮັດສິ່ງທີ່ຖືກຕ້ອງ.
[14]ຖ້າມີຄົນທີ່ບໍ່ໄດ້ເຊື່ອຟັງຄໍາເວົ້າຂອງເຮົາໃນຈົດຫມາຍສະບັບນີ້, ໃຫ້ຫມາຍຫົວເຂົາໄວ້ ແລະ ຢ່າໄປຄົບຄ້າສະມາຄົມກັບເຂົາ,
ເພື່ອທີ່ວ່າເຂົາຈະຮູ້ສຶກລະອາຍ.[15]ຢ່າຄິດວ່າເຂົາເປັນສັດຕຣູ ແຕ່ໃຫ້ຕັກເຕືອນເຂົາໃນຖານະທີ່ເປັນພີ່ນ້ອງ.
[16]ຂໍອົງພຣະຜູ້ເປັນເຈົ້າແຫ່ງສັນຕິສຸກປະທານສັນຕິສຸກແກ່ທ່ານໃນທຸກເວລາ ແລະ ທຸກສະຖານະການ.
ຂໍອົງພຣະຜູ້ເປັນເຈົ້າສະຖິດຢູ່ກັບພວກທ່ານທຸກຄົນ.[17]ນີ້ເປັນການທັກທາຍຂອງຂ້າພຣະເຈົ້າ, ໂປໂລຂຽນດ້ວຍມືຂອງຂ້າພຣະເຈົ້າເອງ,
ຊຶ່ງເປັນສັນຍາລັກໃນຈົດຫມາຍທຸກສະບັບ. ນີ້ເປັນວິທີທີ່ຂ້າພຣະເຈົ້າຂຽນ.[18]ຂໍພຣະຄຸນແຫ່ງອົງພຣະເຢຊູຄຣິດເຈົ້າ
ດໍາຣົງຢູ່ກັບພວກທ່ານທຸກຄົນເຖີ້ນ.

# 1 ຕີໂມທຽວ

1 [1]ຈາກໂປໂລ, ອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ ຕາມພຣະບັນຊາຂອງພຣະເຈົ້າອົງພຣະຜູ້ຊ່ວຍໃຫ້ພົ້ນຂອງເຮົາ ແລະ
ຈາກພຣະເຢຊູຄຣິດເຈົ້າ ຜູ້ທີ່ເປັນຄວາມຫມັ້ນໃຈຂອງເຮົາ,[2]ເຖິງຕີໂມທຽວ, ຜູ້ເປັນບຸດທີ່ແທ້ຈິງໃນຄວາມເຊື່ອຂອງເຮົາ: ຂໍໃຫ້ພຣະຄຸນ,
ພຣະເມດຕາ, ແລະ ສັນຕິສຸກຈາກພຣະເຈົ້າພຣະບິດາ ແລະ ຈາກພຣະເຢຊູຄຣິດເຈົ້າ ແລະ
ອົງພຣະຜູ້ເປັນເຈົ້າຂອງເຮົາຈົ່ງດໍາຣົງຢູ່ກັບທ່ານເຖີດ.

[3]ຂະນະທີ່ຂ້າພຣະເຈົ້າກໍາລັງໄປທີ່ແຂວງມາຊີໂດເນັຽ,
ຂ້າພຣະເຈົ້າໄດ້ຂໍຮ້ອງໃຫ້ທ່ານຄອຍທີ່ເມືອງເອເຟໂຊເພື່ອໃຫ້ທ່ານສາມາດສອນບາງຄົນບໍ່ໃຫ້ສອນຜິດໄປຈາກຫລັກຄໍາສອນ.
[4]ອີກທັງບໍ່ໃຫ້ໃສ່ໃຈໃນເລື່ອງລາວຕ່າງໆ ແລະ ລໍາດັບພົງພັນທີ່ບໍ່ຮູ້ຈົບ. ເຫລົ່ານີ້ຈະເຮັດໃຫ້ເກີດການຜິດຖຽງກັນຫລາຍກວ່າເກົ່າ
ແທນທີ່ຈະເຮັດໃຫ້ແຜນການຂອງພຣະເຈົ້າ, ສໍາເລັດໂດຍທາງຄວາມເຊື່ອ.
[5]ເປົ້າຫມາຍຂອງຄໍາສັ່ງນີ້ຄືຄວາມຮັກທີ່ມາຈາກຫົວໃຈບໍຣິສຸດ, ແລະ ຈາກຄວາມສໍານຶກທີ່ດີ, ແລະ ຈາກຄວາມເຊື່ອທີ່ຈິງໃຈ.
[6]ແຕ່ວ່າບາງຄົນໄດ້ຫລົງຜິດໃນເລື່ອງນີ້ໄປ ແລະ ໄດ້ຫັນໄປຈາກສິ່ງເຫລົ່ານີ້ທີ່ກ່າວຢ່າງໂງ່ຈ້າ.
[7]ພວກເຂົາມີຄວາມປາຖນາທີ່ຈະເປັນຜູ້ສອນພຣະບັນຍັດ, ແຕ່ວ່າພວກເຂົາບໍ່ເຂົ້າໃຈໃນສິ່ງທີ່ພວກເຂົາສອນ ຫລື
ບໍ່ເຂົ້າໃຈໃນສິ່ງທີ່ພວກເຂົາກ່າວຢືນຢັນ.[8]ແຕ່ພວກເຮົາຮູ້ວ່າພຣະບັນຍັດນັ້ນເປັນສິ່ງທີ່ດີ ຖ້າເຮົາໃຊ້ຢ່າງຖືກຕ້ອງ.
[9]ພວກເຮົາຮູ້ວ່າ, ພຣະບັນຍັດນັ້ນບໍ່ໄດ້ມີໄວ້ສໍາລັບຄົນຊອບທັມ, ແຕ່ມີໄວ້ສໍາລັບຄົນອະທັມ ແລະ ຄົນທີ່ມີໃຈດື້ດ້ານ,
ສໍາລັບຄົນທີ່ບໍ່ມີພຣະເຈົ້າແລະ ຄົນບາບ, ແລະ ຕໍ່ຄົນເຫລົ່ານັ້ນທີ່ເປັນຄົນທີ່ບໍ່ໄດ້ດໍາເນີນໃນທາງຂອງພຣະເຈົ້າ ແລະ
ຄົນທີ່ຫມິ່ນປະຫມາດພຣະເຈົ້າ. ພຣະບັນຍັດມີໄວ້ສໍາລັບຄົນຂ້າພໍ່ ແລະ ແມ່ຂອງພວກເຂົາເອງ, ແລະ ຄົນທີ່ເປັນຜູ້ຂ້າຄົນ,
[10]ສໍາລັບຄົນທີ່ປະພຶດຜິດທາງເພດ, ຄົນຮັກຮ່ວມເພດ, ຄົນລັກພາຄົນອື່ນໄປເປັນທາດ, ຄົນຂີ້ຕົວະ, ຄົນເປັນພະຍານບໍ່ຈິງ
ແລະຄົນອື່ນໆທີ່ຕໍ່ຕ້ານຫລັກຄໍາສອນແຫ່ງຄວາມເຊື່ອ.[11]ຄໍາສັ່ງສອນນີ້ ແມ່ນຕາມທີ່ມີໃນຂ່າວປະເສີດອັນສະຫງ່າຣາສີຂອງພຣະເຈົ້າ
ຜູ້ສົມຄວນແກ່ການສັນຣະເສີນ ເຊິ່ງໄດ້ຊົງປະທານແກ່ຂ້າພຣະເຈົ້າ.
[12]ຂ້າພຣະເຈົ້າຂອບພຣະຄຸນພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າ. ພຣະອົງເປັນຜູ້ຊົງເສີມກໍາລັງໃຫ້ແກ່ຂ້າພຣະເຈົ້າ,
ພຣະອົງຊົງເຫັນວ່າຂ້າພຣະເຈົ້າເປັນຄົນສັດຊື່ ແລະ ໄດ້ຊົງໃຊ້ຂ້າພຣະເຈົ້າໃຫ້ເຮັດພັນທະກິດນີ້.
[13]ຂ້າພຣະເຈົ້າໄດ້ເຄີຍເປັນຄົນທີ່ຫມິ່ນປະຫມາດ, ຂົ່ມເຫັງ ແລະ ໃຊ້ຄວາມຮຸນແຮງ. ແຕ່ຂ້າພຣະເຈົ້າໄດ້ຮັບພຣະເມດຕາ
ເພາະຂ້າພຣະເຈົ້າໄດ້ສະແດງອອກຢ່າງໂງ່ຈ້າໃນຄວາມບໍ່ເຊື່ອ.[14]ແຕ່ວ່າພຣະຄຸນຂອງພຣະເຈົ້າທີ່ມີຢ່າງລົ້ນເຫລືອ ສໍາລັບຂ້າພຣະເຈົ້າ
ໂດຍຜ່ານທາງຄວາມເຊື່ອ ແລະຄວາມຮັກທີ່ມີໃນພຣະເຢຊູຄຣິດເຈົ້າ.
[15]ຄໍາກ່າວນີ້ເປັນຄວາມຈິງທີ່ເຊື່ອຖືໄດ້ ແລະ ສົມຄວນທີ່ຈະຮັບໄວ້ຢ່າງຍິ່ງ, ນັ້ນຄືພຣະເຢຊູຄຣິດເຈົ້າ ໄດ້ສະເດັດເຂົ້າມາໃນໂລກນີ້
ເພື່ອຊ່ວຍຄົນບາບໃຫ້ລອດພົ້ນ. ຂ້າພຣະເຈົ້າຊົ່ວຊ້າທີ່ສຸດໃນບັນດາຄົນບາບເຫລົ່ານັ້ນ.[16]ແຕ່ດ້ວຍເຫດນີ້ ຂ້າພຣະເຈົ້າຈຶ່ງໄດ້ຮັບພຣະເມດຕາ,
ເພາະສິ່ງນັ້ນຢູ່ໃນຂ້າພຣະເຈົ້າ, ທີ່ສໍາຄັນທີ່ສຸດ, ເພື່ອຈະໄດ້ເຫັນວ່າພຣະເຢຊູຄຣິດເຈົ້າໄດ້ມີຄວາມອົດທົນຫລວງຫລາຍ.

ພຣະອົງໄດ້ເປັນແບບຢ່າງແກ່ຄົນທັງຫລາຍທີ່ຈະວາງໃຈໃນພຣະອົງ ເພື່ອໄດ້ຮັບຊີວິດອັນຕະຫລອດໄປເປັນນິດ.[17]ບັດນີ້
ເຖິງກະສັດຜູ້ຊົງດຳຣົງຢູ່ນິຣັນ, ຜູ້ຊົງອຳມະຕະ, ຜູ້ບໍ່ສາມາດປາກົດເຫັນໄດ້ດ້ວຍຕາ, ຜູ້ຊົງເປັນພຣະເຈົ້າແຕ່ອົງດຽວ, ຂໍໃຫ້ພຣະກຽດ ແລະ
ພຣະສະຫງ່າຣາສີຈົ່ງມີແດ່ພຣະອົງຕະຫລອດໄປເປັນນິດ ອາແມນ.
[18]ຂ້າພຣະເຈົ້າຂໍມອບຄຳສັ່ງນີ້ແກ່ທ່ານ, ຕີໂມທຽວ, ລູກທີ່ຮັກຂອງເຮົາເອີຍ,
ເພາະຂ້າພຣະເຈົ້າເຮັດຕາມຄຳທຳນວາຍທີ່ໄດ້ກ່າວເຖິງທ່ານໃນກ່ອນຫນ້ານີ້,
ດັ່ງນັ້ນທ່ານອາດຈະໃຊ້ສິ່ງເຫລົ່ານີ້ເພື່ອໃຫ້ໄດ້ຊັຍຊະນະໃນການຕໍ່ສູ້,[19]ຂໍໃຫ້ທ່ານເຮັດສິ່ງເຫລົ່ານີ້ຄືມີຄວາມເຊື່ອ ແລະ ຄວາມສຳນຶກທີ່ດີ.
ໂດຍການປະຕິເສດສິ່ງນີ້, ບາງຄົນໄດ້ເຮັດໃຫ້ຄວາມເຊື່ອຂອງເຂົາຫລົ້ມຈົມລົງໄປ.[20]ຊຶ່ງໃນຈຳນວນຄົນເຫລົ່ານັ້ນມີ ເຮມີນາໂຢ ແລະ
ອາເລັກຊັນເດີ, ຜູ້ຊຶ່ງຂ້າພຣະເຈົ້າໄດ້ມອບໄວ້ໃຫ້ກັບຊາຕານ ເພື່ອເຂົາຈະໄດ້ຮັບການສອນທີ່ຈະບໍ່ຫມິ່ນປະຫມາດພຣະເຈົ້າ.


generated on Tue Jun 17 19:01:42 2025

2 [1]ດັ່ງນັ້ນ ກ່ອນສິ່ງອື່ນໃດທັງຫມົດ, ຂ້າພຣະເຈົ້າຂໍຮ້ອງໃຫ້ທ່ານທູນຂໍ, ອະທິຖານ, ວິງວອນ ແລະ ຂອບພຣະຄຸນເພື່ອຄົນທັງປວງ,
[2]ເພື່ອກະສັດທັງຫລາຍ ແລະ ທຸກຄົນທີ່ມີອຳນາດ, ເພື່ອວ່າເຮົາຈະດຳເນີນຊີວິດຢ່າງສັນຕິສຸກ ແລະ
ມີຄວາມສະຫງົບທ່າມກາງຄົນທີ່ດຳເນີນໃນທາງຂອງພຣະເຈົ້າ ແລະ ຄົນທີ່ມີກຽດ.[3]ການກະທຳຢ່າງນີ້ເປັນສິ່ງທີ່ດີ ແລະ
ເປັນສິ່ງພໍພຣະທັຍຕໍ່ພຣະເຈົ້າອົງພຣະຜູ້ຊ່ວຍໃຫ້ພົ້ນຂອງເຮົາ.[4]ເພາະພຣະອົງຊົງປະສົງໃຫ້ທຸກຄົນໄດ້ຮັບຄວາມລອດພົ້ນ ແລະ
ໃຫ້ໄດ້ມີຄວາມຮູ້ໃນຄວາມຈິງນັ້ນ.

[5]ເພາະວ່າພຣະເຈົ້າມີອົງດຽວ, ແລະ ມີຄົນກາງລະຫວ່າງພຣະເຈົ້າ ແລະ ມະນຸດແຕ່ພຽງຜູ້ດຽວ ຄືພຣະເຢຊູຄຣິດເຈົ້າຜູ້ຊົງສະພາບມະນຸດ.
[6]ຜູ້ໄດ້ຊົງປຣະທານພຣະອົງເອງ ເພື່ອເປັນຄ່າໄຖ່ໃຫ້ກັບຄົນທັງປວງ, ຊຶ່ງເປັນຄຳພະຍານໃນເວລາທີ່ເຫມາະສົມ.[7]ດ້ວຍເຫດນີ້ເອງ,
ຂ້າພຣະເຈົ້າຈຶ່ງໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ປະກາດ ແລະ ເປັນອັກຄະສາວົກ. ຊຶ່ງຂ້າພຣະເຈົ້າ ເວົ້າຄວາມຈິງ.
ຂ້າພຣະເຈົ້າບໍ່ໄດ້ເວົ້າຕົວະເລີຍ. ຂ້າພຣະເຈົ້າເປັນຄຣູຂອງຄົນຕ່າງຊາດໃນເລື່ອງຄວາມເຊື່ອ ແລະ ຄວາມຈິງ.
[8]ດັ່ງນັ້ນ, ຂ້າພຣະເຈົ້າມີຄວາມປາຖນາໃຫ້ບັນດາຜູ້ຊາຍໃນທຸກໆບ່ອນ ຍົກມືອັນບໍຣິສຸດ ແລະ ອະທິຖານໂດຍບໍ່ມີຄວາມຄຽດຮ້າຍ
ແລະການຜິດຖຽງກັນ.[9]ເຊັ່ນດຽວກັນ, ຂ້າພຣະເຈົ້າມີຄວາມປາຖນາໃຫ້ຜູ້ຍິງແຕ່ງກາຍຢ່າງສຸພາບຮຽບຮ້ອຍ, ແລະ ຮູ້ຈັກຄວບຄຸມຕົນເອງ.
ພວກເຂົາບໍ່ຄວນເຮັດຊົງຜົມເກີນໄປ, ຫລື ປະດັບຕົວດ້ວຍທອງຄຳ ຫລື ໄຂ່ມຸກ, ຫລືເຄື່ອງນຸ່ງທີ່ມີລາຄາແພງ.
[10]ຂ້າພຣະເຈົ້າປາຖນາທີ່ຈະໃຫ້ພວກເຂົາແຕ່ງກາຍດ້ວຍສິ່ງທີ່ເຫມາະສົມສຳລັບຜູ້ຍິງ
ຄືຜູ້ທີ່ດຳເນີນຊີວິດຕາມທາງຂອງພຣະເຈົ້າດ້ວຍການເຮັດດີ.
[11]ແມ່ຍິງຄົນຫນຶ່ງຄວນທີ່ຈະຮຽນຢ່າງງຽບໆ ແລະ ຍອມເຊື່ອຟັງປະຕິບັດຕາມ.[12]ຂ້າພຣະເຈົ້າບໍ່ອະນຸຍາດໃຫ້ແມ່ຍິງ ສອນ ຫລື
ມີອຳນາດເຫນືອຜູ້ຊາຍ, ແຕ່ດຳເນີນຊີວິດຢ່າງງຽບໆ.
[13]ເພາະວ່າອາດາມໄດ້ຖືກສ້າງກ່ອນເອວາ,[14]ອາດາມບໍ່ໄດ້ຖືກລໍ້ລວງ, ແຕ່ຍິງນັ້ນຖືກລໍ້ລວງໃຫ້ເຮັດບາບຢ່າງສິ້ນເຊີງ.[15]ຢ່າງໃດກໍຕາມ,
ຜູ້ຍິງຈະໄດ້ຮັບຄວາມພົ້ນ ຜ່ານທາງການມີລູກ, ຖ້າພວກເຂົາຍັງຄົງຮັກສາຄວາມເຊື່ອ ແລະ ຄວາມຮັກ ແລະ
ການຊຳຣະໃຫ້ບໍຣິສຸດດ້ວຍຈິດໃຈທີ່ສະຫງົບ.

 generated on Tue Jun 17 19:01:42 2025

3 [1]ຄຳນີ້ເປັນຄວາມຈິງເຊື່ອຖືໄດ້: ຖ້າວ່າຄົນໃດປາຖະນາທີ່ຈະເປັນຜູ້ປົກຄອງຄຣິສຕະຈັກ, ຄົນນັ້ນກໍປາຖະນາເຮັດສິ່ງທີ່ດີ.
[2]ດັ່ງນັ້ນຜູ້ທີ່ຈະເປັນຜູ້ປົກຄອງຈະຕ້ອງເປັນຜູ້ທີ່ບໍ່ມີທີ່ຕິຕຽນໄດ້. ເຂົາຕ້ອງມີຜົວເມຍຄົນດຽວ. ເຂົາຕ້ອງບໍ່ໃຊ້ຄວາມຮຸນແຮງ,
ເປັນຄົນມີເຫດຜົນ, ມີຄວາມເປັນຣະບຽບ, ມີໄມຕຣີຈິດ. ເຂົາຕ້ອງສາມາດສັ່ງສອນໄດ້.[3]ເຂົາຕ້ອງບໍ່ເປັນຄົນຕິດເຫລົ້າ,
ບໍ່ເປັນຄົນມັກກໍໃຫ້ເກີດການວິວາດຜິດຖຽງກັນ, ແຕ່ມີຄວາມສຸພາບອ່ອນໂຍນ, ແລະ ຮັກສັນຕິສຸກ. ເຂົາຕ້ອງບໍ່ເປັນຄົນທີ່ຮັກເງິນຄຳ.

[4]ເຂົາຕ້ອງເປັນຄົນທີ່ສາມາດດູແລຄອບຄົວຂອງຕົນໄດ້ດີ, ແລະ ສາມາດສັ່ງສອນລູກຊາຍ-ຍິງໃຫ້ເຊື່ອຟັງດ້ວຍຄວາມເຄົາຣົບນັບຖືທຸກປະການ.
[5]ດັ່ງນັ້ນຖ້າຊາຍໃດບໍ່ສາມາດດູແລຄອບຄົວຂອງເຂົາໃຫ້ດີໄດ້ແລ້ວ, ເຂົາຈະດູແລຄຣິສຕະຈັກຂອງພຣະເຈົ້າໄດ້ຢ່າງໃດ?
[6]ເຂົາບໍ່ຄວນເປັນຜູ້ກັບໃຈໃຫມ່, ເພາະຢ້ານວ່າເຂົາຈະອວດຕົວດ້ວຍຄວາມຍິ່ງຈອງຫອງ ແລະ ອາດຈະລົ້ມລົງໃນການປະນາມ
ເຫມືອນກັບມານນັ້ນ.[7]ເຂົາຕ້ອງເປັນຄົນທີ່ມີຊື່ສຽງດີເປັນທີ່ຫນ້ານັບຖືກັບຄົນພາຍນອກ, ເພື່ອເຂົາຈະບໍ່ເຮັດໃຫ້ຕົນເອງຕ້ອງອັບອາຍ ແລະ
ຕິດບ້ວງຂອງມານ.
[8]ຝ່າຍຜູ້ດູແລ, ກໍເຊັ່ນດຽວກັນ, ຄວນເປັນຄົນທີ່ປະພຶດດີ, ບໍ່ເວົ້າກັບໄປກັບມາ. ພວກເຂົາບໍ່ຄວນດື່ມເຫລົ້າ ຫລື ບໍ່ເປັນຄົນໂລບ.
[9]ພວກເຂົາຄວນຮັກສາຄວາມຈິງທີ່ໄດ້ເປີດເຜີຍໄວ້ ໃນຄວາມເຊື່ອດ້ວຍຄວາມສຳນຶກອັນບໍຣິສຸດ.[10]ພວກເຂົາຄວນໄດ້ຮັບການພິສູດກ່ອນ,
ຫາກເຂົາບໍ່ມີຕຳຫນິຈຶ່ງຄ່ອຍຮັບໃຊ້.
[11]ຝ່າຍແມ່ຍິງກໍເຫມືອນກັນຈະຕ້ອງເປັນຄົນທີ່ມີຄວາມປະພຶດທີ່ດີ. ພວກເຂົາບໍ່ຄວນເປັນຄົນທີ່ບໍ່ກ່າວຮ້າຍ.
ພວກເຂົາຄວນເປັນຄົນທີ່ບໍ່ມັກຄວາມຮຸນແຮງ ແລະ ມີຄວາມສັດຊື່ໃນທຸກສິ່ງ.[12]ຜູ້ດູແລຈະຕ້ອງມີຜົວເມັຽຄົນດຽວ.
ພວກເຂົາຕ້ອງສາມາດດູແລລູກຊາຍຍິງ ແລະ ບ້ານເຮືອນຂອງຕົນໃຫ້ໄດ້ດີ.
[13]ຝ່າຍຄົນເຫລົ່ານັ້ນທີ່ຮັບໃຊ້ຢ່າງດີແລ້ວກໍຈະມີຄວາມຫມັ້ນຄົງໃນຈຸດຢືນຂອງຕົນ ແລະ
ມີຄວາມຫມັ້ນໃຈຢ່າງໃຫຍ່ຫລວງໃນຄວາມເຊື່ອຂອງຕົນໃນພຣະເຢຊູຄຣິດເຈົ້າ.
[14]ຂ້າພຣະເຈົ້າກຳລັງຂຽນສິ່ງເຫລົ່ານີ້ເຖິງທ່ານ, ແລະ ຂ້າພຣະເຈົ້າຫວັງວ່າ ຈະມາຫາທ່ານໃນໄວໆນີ້.[15]ແຕ່ຖ້າຂ້າພຣະເຈົ້າມາຊ້າ,
ຂ້າພຣະເຈົ້າຈະຂຽນສິ່ງນີ້ເພື່ອທ່ານກໍຈະໄດ້ຮູ້ວ່າທ່ານຄວນຈະປະຕິບັດຢ່າງໃດ ຕໍ່ຄົນໃນຄອບຄົວຂອງພຣະເຈົ້າ,
ຄືຄຣິສຕະຈັກຂອງພຣະເຈົ້າຜູ້ຊົງພຣະຊົນຜູ້ຊຶ່ງເປັນຫລັກ ແລະ ເສົາຄ້ຳຂອງຄວາມຈິງ.
[16]ເປັນສິ່ງທີ່ປະຕິເສດບໍ່ໄດ້ເລີຍວ່າການເປີດເຜີຍຄວາມຈິງທີ່ຍິ່ງໃຫຍ່ຂອງຄົນທີ່ເຊື່ອໃນພຣະເຈົ້ານັ້ນຄືວ່າ:
"ພຣະອົງຊົງໄດ້ປາກົດດ້ວຍສະພາບເນື້ອຫນັງ, ເປັນຜູ້ຊອບທັມດ້ວຍພຣະວິນຍານ, ຊົງປາກົດຕໍ່ຫນ້າເຫລົ່າທູດສະຫວັນ,
ຊົງໄດ້ຮັບການປະກາດອອກໄປທ່າມກາງບັນດາປະຊາຊາດທັງຫລາຍ, ໄດ້ຮັບການຍອມຮັບຈາກຄົນທົ່ວໂລກ ແລະ
ຊົງຖືກຮັບຂຶ້ນໄປດ້ວຍພຣະສະຫງ່າຣາສີ."


generated on Tue Jun 17 19:01:42 2025

4 [1]ດຽວນີ້ ພຣະວິນຍານໄດ້ກ່າວຢ່າງຊັດເຈນວ່າ ຕໍ່ມາພາຍຫລັງຈະມີບາງຄົນປະຖິ້ມຄວາມເຊື່ອ ແລະ ສົນໃຈໃນພວກວິນຍານທີ່ຫລອກລວງ
ແລະບັນດາຄຳສອນຂອງພວກມານ.[2]ຄຳສັ່ງສອນເຫລົ່ານັ້ນມາຈາກຄົນຫນ້າຊື່ໃຈຄົດ ແລະ ຄົນຂີ້ຕົວະ ຄືພວກທີ່ຄວາມສຳນຶກຕາຍດ້ານ.

[3]ພວກເຂົາຈະຫ້າມແຕ່ງງານ ແລະ ຫ້າມກິນອາຫານທີ່ພຣະເຈົ້າໄດ້ຊົງສ້າງມາໃຫ້ກັບຄົນທີ່ເຊື່ອ ແລະ
ຄົນທີ່ຮູ້ຈັກຄວາມຈິງໄດ້ແບ່ງປັນກັນດ້ວຍຄວາມຂອບພຣະຄຸນພຣະເຈົ້າຮ່ວມກັນ.[4]ເພາະວ່າທຸກສິ່ງທີ່ພຣະເຈົ້າໄດ້ຊົງສ້າງນັ້ນເປັນສິ່ງທີ່ດີ.
ບໍ່ມີອັນໃດເປັນສິ່ງຕ້ອງຫ້າມ ຖ້າກິນດ້ວຍການຂອບພຣະຄຸນ.[5]ເພາະໄດ້ຊຳຣະໃຫ້ບໍຣິສຸດ ໂດຍພຣະຄັມຂອງພຣະເຈົ້າ ແລະ ການອະທິຖານ.
[6]ຖ້າທ່ານໄດ້ສອນສິ່ງເຫລົ່ານີ້ຕໍ່ພີ່ນ້ອງຂອງທ່ານ, ທ່ານກໍຈະເປັນຜູ້ຮັບໃຊ້ທີ່ດີຂອງພຣະເຢຊູຄຣິດເຈົ້າ.
ເພາະທ່ານໄດ້ຮັບການລ້ຽງດູໂດຍຖ້ອຍຄຳແຫ່ງຄວາມເຊື່ອ ແລະ ດ້ວຍຄຳສອນທີ່ດີທີ່ທ່ານໄດ້ປະຕິບັດຕາມ.
[7]ແຕ່ຈົ່ງປະຕິເສດຕໍ່ການສົນໃຈໃນນິຍາຍຕ່າງໆໃນໂລກນີ້ທີ່ຜູ້ຍິງແກ່ມັກ. ແຕ່ຈົ່ງຝຶກຕົນໃນທາງຂອງພຣະເຈົ້າ.
[8]ເພາະວ່າການຝຶກຕົນໃນຝ່າຍຮ່າງກາຍນັ້ນອາດຈະມີປະໂຫຍດຫນ້ອຍດຽວ, ແຕ່ວ່າຝຶກຕົນໃນທາງຂອງພຣະເຈົ້ານັ້ນ
ກໍເປັນປະໂຫຍດທຸກປະການ ຊຶ່ງເປັນຄຳສັນຍາຕໍ່ຊີວິດນີ້ແລະ ຊີວິດໃນອານາຄົດທີ່ກຳລັງຈະມາເຖິງ.
[9]ຄຳກ່າວນີ້ເຊື່ອຖືໄດ້ ແລະ ເປັນສິ່ງທີ່ສົມຄວນຈະຮັບເອົາໄວ້ ແລະ ເຊື່ອຢ່າງຄົບຖ້ວນ.[10]ເພາະເລື່ອງນີ້ພວກເຮົາຈຶ່ງຕ້ອງຕໍ່ສູ້ ແລະ
ທຳງານຢ່າງຫນັກ. ເພາະວ່າເຮົາມີຄວາມຫມັ້ນໃຈໃນພຣະເຈົ້າຜູ້ຊົງພຣະຊົນ, ຜູ້ຊຶ່ງເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງທຸກຄົນ,
ໂດຍສະເພາະຂອງບັນດາຜູ້ທີ່ເຊື່ອ.
[11]ທ່ານຈົ່ງປະກາດ ແລະ ສັ່ງສອນສິ່ງເຫລົ່ານີ້[12]ຢ່າໃຫ້ໃຜຫມິ່ນປະຫມາດຄວາມຫນຸ່ມແຫນ້ນຂອງທ່ານໄດ້,
ແຕ່ຈົ່ງເປັນແບບຢ່າງໃຫ້ກັບຄົນເຫລົ່ານັ້ນຄືຜູ້ເຊື່ອ, ໃນຄຳສອນ, ດ້ວຍການປະພຶດ, ຄວາມຮັກ, ຄວາມສັດຊື່ ແລະ ຄວາມບໍຣິສຸດ.
[13]ໃຫ້ພຽນເອົາໃຈໃສ່ໃນການອ່ານ, ການໃຫ້ຄຳແນະນຳ ແລະ ການສອນຈົນກວ່າຂ້າພຣະເຈົ້າຈະມາ.
[14]ຢ່າລະເລີຍຂອງປຣະທານທີ່ມີຢູ່ໃນທ່ານ, ຊຶ່ງທ່ານໄດ້ຮັບຜ່ານທາງການເຜີຍພຣະວັດຈະນະ ທີ່ບັນດາຜູ້ອາວຸໂສໄດ້ວາງມືເທິງທ່ານນັ້ນ.
[15]ຈົ່ງເອົາໃຈໃສ່ສິ່ງເຫລົ່ານີ້. ຈົ່ງເຮັດຕາມສິ່ງເຫລົ່ານີ້, ເພື່ອວ່າຄວາມກ້າວຫນ້າຂອງທ່ານຈະປະກົດຊັດເຈນຕໍ່ຫນ້າຄົນທັງປວງ.
[16]ຈົ່ງເອົາໃຈໃສ່ຕໍ່ຕົວທ່ານເອງ ແລະ ຄຳສອນຂອງທ່ານຢ່າງຮອບຄອບ ແລະ ດຳເນີນຕໍ່ໄປໃນສິ່ງເຫລົ່ານີ້. ເພາະວ່າການກະທຳຢ່າງນີ້,
ຈະເຮັດໃຫ້ທັງຕົວທ່ານເອງ ແລະ ບັນດາຜູ້ທີ່ໄດ້ຟັງຖ້ອຍຄຳຂອງທ່ານໄດ້ຮັບຄວາມພົ້ນດ້ວຍ.


generated on Tue Jun 17 19:01:42 2025

5 [1]ຢ່າເວົ້າຈາຫມິ່ນປະຫມາດຜູ້ອາວຸໂສກວ່າ. ແຕ່ຈົ່ງເວົ້າຫນູນໃຈເພິ່ນເຫມືອນເປັນບິດາ. ຈົ່ງປະຕິບັດຕໍ່ຊາຍຫນຸ່ມກວ່າ
ເຫມືອນພວກເຂົາເປັນອ້າຍນ້ອງ.[2]ຈົ່ງກ່າວຫນູນໃຈບັນດາແມ່ຍິງທີ່ອາວຸໂສກວ່າເຫມືອນເປັນແມ່, ແລະ
ຕັກເຕືອນບັນດາຜູ້ຍິງຫນຸ່ມກວ່າເຫມືອນພວກເຂົາເປັນນ້ອງສາວດ້ວຍຄວາມບໍຣິສຸດທຸກຢ່າງ.

[3]ຈົ່ງໃຫ້ກຽດບັນດາຍິງຫມ້າຍ, ທີ່ຂາດທີ່ເພິ່ງພາ.[4]ແຕ່ຖ້າຍິງຫມ້າຍຄົນໃດມີລູກ ຫລື ຫລານ,
ກໍໃຫ້ພວກເຂົາໃຫ້ກຽດຄົນໃນຄອບຄົວຂອງພວກເຂົາເອງກ່ອນ. ໃຫ້ເຂົາໄດ້ຕອບແທນຄຸນຂອງບິດາມານດາຂອງຕົນ,
ເພາະການກະທຳສິ່ງນີ້ເປັນສິ່ງທີ່ພໍພຣະທັຍພຣະເຈົ້າ.
[5]ແຕ່ຜູ້ທີ່ເປັນຍິງຫມ້າຍແທ້ໆ ທີ່ຖືກປະຖິ້ມໃຫ້ຢູ່ຜູ້ດຽວ. ໃຫ້ນາງຫມັ້ນໃຈໃນພຣະເຈົ້າ. ນາງຄວນອະທິຖານທູນຂໍຕໍ່ພຣະເຈົ້າຢູ່ສະເຫມີທັງເວັນ
ແລະ ຄືນ.[6]ແມ່ຍິງທີ່ໃຊ້ຊີວິດປ່ອຍຕົວຕາມໃຈຕົນເອງກໍເຫມືອນຄົນທີ່ຕາຍແລ້ວ, ແມ່ນວ່ານາງຍັງມີຊີວິດຢູ່ກໍຕາມ.
[7]ຈົ່ງສອນສິ່ງເຫລົ່ານີ້ດ້ວຍເພື່ອທີ່ພວກເຂົາຈະບໍ່ເປັນທີ່ຕິຕຽນໄດ້.[8]ແຕ່ຖ້າໃຜທີ່ບໍ່ລ້ຽງດູຍາດພີ່ນ້ອງຂອງເຂົາ,
ໂດຍສະເພາະຄົນເຫລົ່ານັ້ນໃນຄອບຄົວຂອງເຂົາເອງ, ຜູ້ນັ້ນກໍໄດ້ປະຕິເສດຄວາມເຊື່ອ ແລະ ຊົ່ວຍິ່ງກວ່າຄົນບໍ່ເຊື່ອອີກ.
[9]ຜູ້ທີ່ຂຶ້ນທະບຽນເປັນຍິງຫມ້າຍໄດ້ນັ້ນຕ້ອງມີອາຍຸບໍ່ຕໍ່າກວ່າຫົກສິບປີ, ເປັນເມັຽຂອງຊາຍຄົນດຽວ.
[10]ນາງຕ້ອງເປັນທີ່ຮູ້ຈັກວ່າເປັນຄົນທີ່ມີຄວາມປະພຶດອັນດີ, ເຊັ່ນໃນເລື່ອງທີ່ນາງເອົາໃຈໃສ່ລ້ຽງດູລູກໆ, ຫລື
ທີ່ມີໄມຕີຈິດຕ້ອນຮັບແຂກແປກຫນ້າຕ່າງໆ ຫລື ທີ່ເຄີຍລ້າງຕີນຜູ້ເຊື່ອທັງຫລາຍ, ຫລື ທີ່ເຄີຍບັນເທົາຄວາມເດືອດຮ້ອນຂອງຜູ້ທຸກຍາກ, ຫລື
ທີ່ເຄີຍທຸ້ມເທຕົນເອງໃນການເຮັດສິ່ງດີທຸກຢ່າງ.
[11]ແຕ່ຍິງຫມ້າຍສາວໆນັ້ນ, ຢ່າຮັບພວກນາງຂຶ້ນທະບຽນ. ເພາະເມື່ອພວກນາງຍອມຕໍ່ຄວາມຕ້ອງການທາງກາຍ ກໍຈະຕໍ່ຕ້ານພຣະຄຣິດເຈົ້າ,
ພວກນາງກໍຕ້ອງການແຕ່ງງານອີກ.[12]ທີ່ພວກນາງເຮັດສິ່ງນີ້ກໍຖືວ່າເປັນຄວາມຜິດເພາະພວກນາງໄດ້ຖອນຂໍ້ຜູກພັນທີ່ໃຫ້ໄວ້ແຕ່ຕົ້ນນັ້ນແລ້ວ.
[13]ພວກນາງກໍກາຍເປັນຄົນມັກຢູ່ລ້າໆ, ທຽວເລາະໄປຕາມເຮືອນນັ້ນເຮືອນນີ້, ແຕ່ຍິ່ງຮ້າຍກວ່ານັ້ນ ແຕ່ກາຍເປັນຄົນມັກເວົ້າຂວັນຄົນອື່ນ ແລະ
ຫຍຸ້ງກ່ຽວກັບເລື່ອງຂອງຄົນອື່ນ. ພວກເຂົາເວົ້າໃນເລື່ອງທີ່ບໍ່ສົມຄວນເວົ້າ.
[14]ເຫດສະນັ້ນ ຂ້າພຣະເຈົ້າຈຶ່ງຢາກໃຫ້ຍິງຫມ້າຍສາວໆນັ້ນ, ແຕ່ງງານມີລູກ, ດູແລບ້ານເຮືອນ
ເພື່ອບໍ່ໃຫ້ສັດຕຣູມີໂອກາດກ່າວຫາໄດ້ວ່າເຮົາເຮັດຊົ່ວ.[15]ດ້ວຍວ່າມີບາງຄົນໄດ້ຫັນໄປຕິດຕາມຊາຕານແລ້ວ.
[16]ຖ້າຫາກຜູ້ເຊື່ອທີ່ເປັນສະຕຣີຄົນໃດມີຍິງຫມ້າຍຢູ່ດ້ວຍ, ກໍຈົ່ງຊ່ວຍເຫລືອພວກນາງ ເພື່ອຈະໄດ້ບໍ່ໄປເພີ່ມພາຣະໃຫ້ກັບຄຣິສຕະຈັກ,
ເພື່ອຄຣິສຕະຈັກເອງຈະໄດ້ຊ່ວຍຍິງຫມ້າຍທີ່ບໍ່ມີທີ່ຢູ່ແທ້ໆ.
[17]ຈົ່ງຖືວ່າບັນດາຜູ້ປົກຄອງທີ່ປົກຄອງໄດ້ດີນັ້ນສົມຄວນ ໄດ້ຮັບກຽດເປັນສອງເທົ່າ, ໂດຍສະເພາະຄົນເຫລົ່ານັ້ນທີ່ເຮັດວຽກໃນການເທສະຫນາ
ແລະ ການສັ່ງສອນ.[18]ເພາະພຣະຄັມພີກ່າວວ່າ, "ຢ່າເອົາບັ້ງຫຽງອັດປາກງົວເມື່ອມັນຢຽບເຂົ້າ" ແລະ "ຄົນງານຄວນໄດ້ຮັບຄ່າຈ້າງຂອງຕົນ."
[19]ຢ່າຍອມຮັບຄຳກ່າວຫາຜູ້ປົກຄອງຄົນໃດ ໂດຍປາສະຈາກພະຍານສອງ ຫລື ສາມຄົນ.[20]ຈົ່ງຕັກເຕືອນຄົນບາບເຫລົ່ານັ້ນຕໍ່ໜ້າທຸກຄົນ
ເພື່ອຄົນອື່ນໆທີ່ເຫລືອຈະໄດ້ຢ້ານ.
[21]ຂ້າພຣະເຈົ້າສັ່ງທ່ານຢ່າງຈິງຈັງຕໍ່ໜ້າພຣະພັກພຣະເຈົ້າ ແລະ ຕໍ່ພຣະເຢຊູຄຣິດເຈົ້າ ແລະເຫລົ່າທູດສະຫວັນທີ່ຊົງເລືອກສັນໄວ້,
ເພື່ອໃຫ້ທ່ານຮັກສາຄຳສັ່ງເຫລົ່ານີ້ໄວ້ໂດຍບໍ່ໄດ້ເຂົ້າຂ້າງອອກຂາ ແລະ ເພື່ອວ່າທີ່ທ່ານຈະບໍ່ໄດ້ເຮັດສິ່ງໃດດ້ວຍຄວາມລຳອຽງ.
[22]ຢ່າດ່ວນວາງມືເທິງຄົນໃດ. ຢ່າມີສ່ວນຮ່ວມໃນການເຮັດບາບໃດໆຂອງຜູ້ອື່ນ. ທ່ານຄວນຮັກສາຕົນເອງໃຫ້ບໍຣິສຸດ.
[23]ທ່ານບໍ່ຄວນດື່ມແຕ່ນ້ຳ, ແຕ່ຄວນດື່ມເຫລົ້າອະງຸ່ນແດ່ເລັກນ້ອຍ ເພື່ອປະໂຫຍດແກ່ກະເພາະອາຫານຂອງທ່ານ
ເພາະທ່ານມັກບໍ່ສະບາຍຢູ່ເລື້ອຍໆ.[24]ການບາບຂອງບາງຄົນປາກົດຊັດເຈນ, ແລະ ນຳພວກເຂົາໄປສູ່ການພິພາກສາ. ສ່ວນບາບອື່ນໆ
ຈະຕາມມາພາຍຫລັງ.[25]ເຊັ່ນນັ້ນແຫລະ, ການດີບາງຢ່າງກໍປາກົດຊັດເຈນ, ສ່ວນການດີອື່ນໆທີ່ຍັງບໍ່ປາກົດຊັດເຈນ
ກໍບໍ່ສາມາດປິດບັງໄວ້ໄດ້ເຊັ່ນກັນ.

 generated on Tue Jun 17 19:01:42 2025

6 [1]ຝ່າຍບັນດາຄົນທີ່ເປັນທາດນັ້ນຕ້ອງຖືນາຍຂອງພວກຕົນວ່າ ເປັນຜູ້ສົມຄວນໄດ້ຮັບກຽດໃນທຸກຢ່າງ. ພວກເຂົາຄວນເຮັດສິ່ງນີ້
ເພື່ອວ່າຈະບໍ່ມີຜູ້ໃດຫມິ່ນປະຫມາດນາມຂອງພຣະເຈົ້າ ແລະຄຳສັ່ງສອນຂອງພວກເຮົາໄດ້.[2]ສ່ວນບັນດາທາດທີ່ມີນາຍເປັນຜູ້ທີ່ເຊື່ອ
ກໍບໍ່ຄວນລົດຄວາມນັບຖືຍ້ອນວ່ານາຍນັ້ນເປັນພີ່ນ້ອງຂອງພວກຕົນ. ແຕ່ໃຫ້ພວກເຂົາຮັບໃຊ້ນາຍໃຫ້ດີຍິ່ງຂຶ້ນອີກ.
ເພາະບັນດານາຍເຫລົ່ານັ້ນຜູ້ໄດ້ຮັບປະໂຫຍດຈາກວຽກຂອງພວກເຂົາກໍເປັນຜູ້ເຊື່ອ ແລະ ເປັນທີ່ຮັກດ້ວຍ. ຈົ່ງສອນ ແລະ ປະກາດສິ່ງເຫລົ່ານີ້.

[3]ຜູ້ໃດກໍຕາມທີ່ສອນຜິດໄປຈາກນີ້ ແລະ ທັງບໍ່ເຫັນພ້ອມກັບຫລັກຄຳສອນອັນແທ້ຈິງຂອງພຣະເຢຊູຄຣິດເຈົ້າຂອງເຮົາ.
ຫາກວ່າພວກເຂົາບໍ່ຍອມຮັບກັບຄຳສັ່ງສອນອັນຖືກຕ້ອງ ທີ່ຊີ້ນຳໃນທາງຂອງພຣະເຈົ້າ.[4]ຄົນນັ້ນກໍອວດຕົວ ແລະບໍ່ຮູ້ຫຍັງເລີຍ. ແຕ່ເຂົາປ່ວຍ
ດ້ວຍຄວາມຂັດແຍ້ງແລະ ໂຕ້ຖຽງກັນເລື່ອງຖ້ອຍຄຳ. ຖ້ອຍຄຳເຫລົ່ານີ້ມີຜົນເຮັດໃຫ້ອິດສາກັນ, ຜິດຖຽງກັນ ຫມິ່ນປະໝາດກັນ,
ລະແວງສົງໃສກັນ, ແລະ[5]ຄວາມຂັດແຍ້ງກັນຢ່າງບໍ່ມີທີ່ສິ້ນສຸດ ລະຫວ່າງຄົນໃຈດ້ານ. ພວກເຂົາຫັນຫນີຈາກຄວາມຈິງ.
ພວກເຂົາຄິດວ່າທາງຂອງພຣະເຈົ້າ ເປັນທາງທີ່ຈະເຮັດໃຫ້ຮັ່ງມີໄດ້.
[6]ບັດນີ້ຕາມທາງພຣະເຈົ້າ ດ້ວຍຄວາມພຶງພໍໃຈນັ້ນ ເຮັດໃຫ້ຮັ່ງມີສີສຸກຫລວງຫລາຍ.[7]ເພາະເຮົາບໍ່ໄດ້ເອົາສິ່ງໃດເຂົ້າມາໃນໂລກ. ສັນໃດ
ເຮົາກໍບໍ່ສາມາດເອົາສິ່ງໃດອອກໄປໄດ້ສັນນັ້ນ.[8]ສະນັ້ນ, ໃຫ້ເຮົາພໍໃຈໃນອາຫານ ແລະ ເສື້ອຜ້າທີ່ມີຢູ່.
[9]ບັດນີ້ບັນດາຄົນເຫລົ່ານັ້ນທີ່ຢາກຮັ່ງມີ ກໍຕົກຢູ່ໃນການທົດລອງ, ຖືກບ້ວງກັບດັກ. ພວກເຂົາຕົກຢູ່ໃນຄວາມໂງ່ງ່າວ ແລະ
ບັນດາກິເລດຕັນຫາອັນຕະຣາຍ, ແລະ ເຮັດໃຫ້ເຈັບປວດ ຊຶ່ງຈ່ອງດຶງຄົນເຫລົ່ານັ້ນຈົມລົງສູ່ຄວາມພິນາດຈິບຫາຍ ແລະການທຳລາຍ.
[10]ດ້ວຍວ່າການຮັກເງິນຄຳເປັນຮາກຂອງຄວາມຊົ່ວທຸກຢ່າງ. ບາງຄົນຢາກຮັ່ງມີຫລາຍຈົນໄດ້ປະຖິ້ມຄວາມເຊື່ອ
ແລ້ວກໍເປັນທຸກຣະທົມໃຈຕົນຫລາຍປະການ.
[11]ແຕ່ທ່ານທັງຫລາຍ, ຊຶ່ງເປັນຄົນຂອງພຣະເຈົ້າ, ຈົ່ງຫລີກຫນີຈາກສິ່ງເຫລົ່ານີ້. ຈົ່ງສະແຫວງຫາຄວາມຊອບທັມ, ທາງຂອງພຣະເຈົ້າ
ຄວາມສັດຊື່, ຄວາມຮັກ, ຄວາມອົດທົນ, ແລະຄວາມອ່ອນສຸພາບ.[12]ໃຫ້ຕໍ່ສູ້ຢ່າງສຸດກຳລັງໃນຄວາມເຊື່ອ.
ຍຶດຫມັ້ນໃນຊີວິດອັນຕະຫລອດໄປເປັນນິດ ຕາມທີ່ທ່ານໄດ້ຖືກເອີ້ນໃຫ້ໄປຮັບນັ້ນ.
ເພາະເລື່ອງນີ້ພວກທ່ານໄດ້ເປັນພະຍານຕໍ່ຫນ້າພະຍານທັງຫລາຍວ່າ ແມ່ນຫຍັງແມ່ນປະເສີດ.
[13]ຂ້າພຣະເຈົ້າຂໍສັ່ງພວກທ່ານຕໍ່ພຣະພັກພຣະເຈົ້າ, ຜູ້ຊົງເຮັດໃຫ້ທຸກສິ່ງມີຊີວິດ, ແລະ ຕໍ່ພຣະພັກຂອງພຣະເຢຊູຄຣິດເຈົ້າ,
ຜູ້ຊົງກ່າວທີ່ເປັນຄວາມຈິງຕໍ່ຫນ້າປີລາດຜູ້ປົກຄອງ:[14]ຈົ່ງຮັກສາພຣະບັນຊານີ້ໄວ້ຢ່າງສົມບູນ, ໂດຍບໍ່ໃຫ້ມີທີ່ຕິຕຽນໄດ້,
ຈົນເຖິງການມາປະກົດຂອງອົງພຣະເຢຊູຄຣິດເຈົ້າ ພຣະເຈົ້າຂອງເຮົາ.
[15]ພຣະເຈົ້າຈະຊົງເປີດເຜີຍການມາປາກົດຂອງພຣະອົງເມື່ອເຖິງເວລາອັນເໝາະສົມ -ພຣະເຈົ້າຜູ້ຊົງສົມຄວນຮັບຄຳສັນຣະເສີນ,
ເປັນຜູ້ດຽວທີ່ຊົງຣິດ, ເປັນມະຫາກະສັດຜູ້ຄອບຄອງ, ເປັນອົງພຣະຜູ້ເປັນເຈົ້າທີ່ປົກຄອງ.[16]ພຣະອົງຜູ້ດຽວທີ່ຕາຍບໍ່ເປັນ ແລະ
ພຣະອົງຢູ່ໃນຄວາມສະຫວ່າງເຊິ່ງບໍ່ມີໃຜເຂົ້າເຖິງໄດ້. ບໍ່ມີຄົນໃດເບິ່ງເຫັນພຣະອົງ. ຂໍພຣະກຽດ ແລະ ຣິດເດດນີຣັນດອນມີແດ່ພຣະອົງ.
ອາແມນ.
[17]ຈົ່ງບອກຄົນທີ່ຮັ່ງມີໃນໂລກນີ້ຢ່າອວດຕົວ, ແລະ ຢ່າຕັ້ງຄວາມຫວັງໃນຄວາມຮັ່ງມີ, ຊຶ່ງບໍ່ແນ່ນອນ.
ແຕ່ພວກເຂົາຄວນຕັ້ງຄວາມຫວັງໃນພຣະເຈົ້າ. ພຣະອົງຊົງມອບຄວາມຮັ່ງມີທີ່ແທ້ຈິງໃຫ້ເຮົາໄດ້ຊື່ນຊົມຍິນດີ.
[18]ຈົ່ງບອກພວກເຂົາໃຫ້ເຮັດຄວາມດີ, ໃຫ້ຮັ່ງມີໃນການກະທຳດີ ໃຫ້ມີໃຈກວ້າງຂວາງ ແລະ ເຕັມໃຈທີ່ຈະແບ່ງປັນ.[19]ໂດຍການເຮັດເຊັ່ນນັ້ນ,
ພວກເຂົາຈະໄດ້ສະສົມຮາກຖານທີ່ດີ ເພື່ອພວກເຂົາເອງໃນເວລາຂ້າງຫນ້າ, ເພື່ອພວກເຂົາຈະໄດ້ຍຶດໃນຊີວິດທີ່ແທ້ຈິງ.
[20]ຕີໂມທຽວເອີຍ, ໃຫ້ປົກປ້ອງສິ່ງທີ່ທ່ານໄດ້ຮັບ. ຫລີກຫນີຈາກການເວົ້າທີ່ໂງ່ງ່າວ ແລະ
ການຜິດຖຽງຂັດແຍ້ງກັນໃນເລື່ອງທີ່ບໍ່ເປັນສາຣະຣຽກວ່າຄວາມຮູ້.[21]ບາງຄົນໄດ້ປະກາດສິ່ງເຫລົ່ານີ້ ແລະ
ດັ່ງນັ້ນພວກເຂົາຈຶ່ງພາດຈາກຄວາມເຊື່ອ. ຂໍພຣະຄຸນຈົ່ງສະຖິດກັບທ່ານເຖີ້ນ.

# 2 ຕີໂມທຽວ

1 [1]ຂ້າພະເຈົ້າ ໂປໂລ ອັກຄະສາວົກຂອງພຣະເຢຊູຄຣິດເຈົ້າຕາມພຣະປະສົງຂອງພຣະເຈົ້າ, ຕາມພຣະສັນຍາແຫ່ງຊີວິດ
ຊຶ່ງເຮົາມີຢູ່ໃນພຣະເຢຊູຄຣິດເຈົ້າ,[2]ຕີໂມທຽວ ລູກທີ່ຮັກ: ຂໍພຣະຄຸນ. ພຣະເມດຕາ ແລະ ສັນຕິສຸກຈາກພຣະເຈົ້າ ພຣະບິດາເຈົ້າ ແລະ
ພຣະເຢຊູຄຣິດເຈົ້າຂອງເຮົາຢູ່ກັບທ່ານເທີ້ນ.

[3]ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າ, ຜູ້ທີ່ຂ້າພະເຈົ້າຮັບໃຊ້ມານັບຕັ້ງແຕ່ ບັນພະບູລຸດຂອງຂ້າພະເຈົ້າ, ດ້ວຍມະໂນທຳທີ່ບໍລິສຸດ,
ເພາະຂ້າພະເຈົ້າລະນຶກເຖິງທ່ານຢ່າງສະຫມໍ່ສະເໝີໃນຄຳອະທິຖານຂອງຂ້າພະເຈົ້າ ຕະຫລອດ ທັງເວັນ ແລະ ຄືນ.
[4]ເມື່ອຂ້າພະເຈົ້າລະນຶກເຖິງນ້ຳຕາຂອງທ່ານ, ຂ້າພະເຈົ້າປາຖະຫນາ ທີ່ຈະໄດ້ພົບທ່ານ, ເພື່ອຂ້າພະເຈົ້າຈະໄດ້ເຕັມລົ້ນດ້ວຍຄວາມຍິນດີ.
[5]ຂ້າພະເຈົ້າໄດ້ນຶກເຖິງຄວາມເຊື່ອທີ່ແທ້ຈິງຂອງທ່ານຊຶ່ງມີຕັ້ງແຕ່ເຖົ້າຂອງທ່ານ ນາງໂລອີ ແລະ ນາງຢູນິເກ ແມ່ ຂອງທ່ານ, ແລະ
ຂ້າພະເຈົ້າໄດ້ເຫັນວ່າຄວາມເຊື່ອມີຢູ່ໃນທ່ານດ້ວຍ.
[6]ນີ້ຄືເຫດຜົນ ທີ່ເຮັດໃຫ້ຂ້າພະເຈົ້າກຳລັງເຕືອນສະຕິທ່ານ ເພື່ອໃຊ້ຂອງປະທານ ຈາກພຣະເຈົ້າທີ່ຢູ່ໃນຕົວທ່ານ
ຂຶ້ນມາອີກຄັ້ງຜ່ານການວາງມືຂອງຂ້າພຣະເຈົ້າ.[7]ເພາະວ່າພຣະເຈົ້າບໍ່ໄດ້ປະທານວິນຍານແຫ່ງຄວາມຢ້ານກົວໃຫ້ພວກເຮົາ,
ແຕ່ໄດ້ຊົງປະທານວິນຍານ ແຫ່ງຣິດເດດອຳນາດ ແລະ ຄວາມຮັກ ແລະ ການບັງຄັບຕົນເອງໃຫ້.
[8]ດັ່ງນັ້ນຢ່າລະອາຍຕໍ່ຄຳພະຍານ ກ່ຽວກັບອົງພຣະຜູ້ເປັນເຈົ້າ ຂອງເຮົາ ຫລື ກ່ຽວກັບຂ້າພະເຈົ້າຄືໂປໂລຜູ້ຖືກຈອງຈຳຢູ່ເພາະເຫັນແກ່ພຣະອົງ
ແຕ່ຈົ່ງຮ່ວມທົນທຸກເພື່ອຂ່າວປະເສີດຕາມຣິດອຳນາດ ຂອງພຣະເຈົ້າ.[9]ຄືພຣະເຈົ້າຜູ້ຊ່ວຍເຮົາທັງຫລາຍໃຫ້ພົ້ນ ແລະ
ຊົງເອີ້ນເຮົາດ້ວຍການຊົງເອີ້ນອັນບໍຣິສຸດ ທີ່ພຣະອົງເຮັດແບບນີ້ ບໍ່ແມ່ນເພາະເປັນໄປຕາມການງານຂອງເຮົາ ແຕ່ເປັນໄປຕາມພຣະປະສົງ ແລະ
ພຣະຄຸນຂອງພຣະອົງເອງ ພຣະອົງຊົງປະທານ ສິ່ງເຫລົ່ານີ້ໃຫ້ແກ່ເຮົາ ໃນພຣະເຢຊູຄຣິດເຈົ້າຕັ້ງແຕ່ກ່ອນການເວລາຈະເກີດຂຶ້ນ.[10]ແຕ່ດຽວນີ້

ຄວາມລອດຂອງພຣະເຈົ້າໄດ້ຖືກ ເປີດເຜີຍໂດຍການສະເດັດມາປາກົດ
ຂອງຜູ້ຊ່ວຍໃຫ້ລອດຄືພຣະເຢຊູຄຣິດເຈົ້າຂອງເຮົາພຣະຄຣິດເຈົ້າເປັນຜູ້ກຳຈັດ ຣິດແຫ່ງຄວາມຕາຍ ແລະ
ນຳເອົາຊີວິດທີ່ບໍ່ເຄີຍມີຈຸດສິ້ນສຸດມາຍັງຄວາມສະຫວ່າງຜ່ານທາງຂ່າວປະເສີດ.[11]ເພາະເຫດນີ້ຂ້າພະເຈົ້າ
ໄດ້ຮັບການແຕ່ງຕັ້ງໃຫ້ເປັນທັງຜູ້ເທດສະໜາອັກຄະສາວົກ ແລະ ເປັນຜູ້ສອນ.
[12]ດ້ວຍເຫດນີ້ຂ້າພະເຈົ້າ ຈຶ່ງຕ້ອງທົນທຸກ ຕໍ່ສິ່ງຕ່າງໆເຫຼົ່ານີ້ດ້ວຍ. ແຕ່ຂ້າພະເຈົ້າກໍບໍ່ລະອາຍ ເພາະຂ້າພະເຈົ້າຮູ້ຈັກພຣະອົງຜູ້ທີ່ຂ້າພະເຈົ້າເຊື່ອ
ຂ້າພະເຈົ້າເຊື່ອໝັ້ນວ່າພຣະອົງສາມາດຮັກສາສິ່ງທີ່ຂ້າພະເຈົ້າໄດ້ມອບໄວ້ກັບພຣະອົງ ຈົນເຖິງວັນນັ້ນໄດ້.[13]ຈົ່ງເຮັດຕາມແບບຢ່າງຂອງຄຳສອນ
ທີ່ທ່ຽງຕົງຕາມທີ່ທ່ານໄດ້ຍິນຈາກ ຂ້າພະເຈົ້າດ້ວຍຄວາມເຊື່ອ ແລະ ຄວາມຮັກໃນພຣະເຢຊູຄຣິດເຈົ້າ.[14]ສິ່ງດີທີ່ພຣະເຈົ້າ
ມອບໝາຍໄວ້ແກ່ທ່ານຈົ່ງປົກປ້ອງຮັກສາໄວ້ ໂດຍຜ່ານທາງ ພຣະວິນຍານບໍຣິສຸດເຈົ້າທີ່ສະຖິດຢູ່ໃນພວກເຮົາ.
[15]ທ່ານຮູ້ເລື່ອງນີ້ແລ້ວວ່າທຸກຄົນໃນແຂວງ ເອເຊຍ ໄດ້ຫັນຫລັງໃຫ້ກັບຂ້າພະເຈົ້າແລ້ວ ໃນກຸ່ມນີ້ມີ ຟູເຄໂລ ແລະ ເຮຣະໂມເກນໄດ້ປະຖິ້ມເຮົາ.
[16]ຂໍອົງພຣະຜູ້ເປັນເຈົ້າຊົງເມດຕາແກ່ຄອບຄົວໂອເນຊີໂຟໂຣ ເພາະເຂົາໄດ້ເຮັດໃຫ້ຂ້າພະເຈົ້າຊື່ນບານຢູ່ສະເໝີ ແລະ
ບໍ່ໄດ້ລະອາຍຕໍ່ການຫລ່າມໂສ້ຂອງຂ້າພະເຈົ້າ,[17]ແຕ່ເມື່ອເຂົາຢູ່ໃນນະຄອນໂຣມ ເຂົາໄດ້ເລີ່ມຕົ້ນ ຊອກຫາຂ້າພະເຈົ້າຈົນເຂົາໄດ້ພົບຂ້າພະເຈົ້າ.
[18]ຂໍອົງພຣະຜູ້ເປັນເຈົ້າຊົງໂຜດປະທານພຣະເມດຕາ ຂອງພຣະອົງໃນວັນນັ້ນດ້ວຍເທີ້ນ ຝ່າຍ ເຈົ້າກໍຮູ້ວ່າດີ
ເພິ່ນໄດ້ຊ່ວຍເຫລືອເຮົາຫລາຍປານໃດ ເມື່ອເຮົາຢູ່ທີ່ເມືອງເອເຟໂຊນັ້ນ.

 generated on Tue Jun 17 19:01:42 2025

# 2

[1]ເຫດສະນັ້ນ, ລູກຂອງເຮົາເອີຍ, ຈົ່ງເຂັ້ມແຂງຂຶ້ນ ໂດຍພຣະຄຸນທີ່ພວກເຮົາມີໃນ ພຣະຄຣິດເຈົ້າເຢຊູ.
[2]ຕໍ່ຫນ້າພະຍານຫລາຍຄົນໄວ້ກັບຄົນທີ່ສັດຊື່ ທີ່ສາມາດສອນ ຄົນອື່ນໄດ້ດ້ວຍ.

[3]3 ຈົ່ງຮ່ວມໃນຄວາມທົນທຸກ ເຫມືອນດັ່ງເປັນທະຫານ ທີ່ດີ ຂອງພຣະຄຣິດເຈົ້າເຢຊູ.
[4]ບໍ່ມີທະຫານຄົນໃດເມື່ອເຂົ້າປະຈໍາການແລ້ວຈະຫຍຸ້ງກ່ຽວກັບການງານຝ່າຍພົນລະເຮືອນ. ດ້ວຍວ່າ,
ເຂົາຕ້ອງເຮັດໃຫ້ຜູ້ທີ່ເກັນຕົນໄດ້ຮັບຄວາມພໍໃຈ.[5]ນັກກິລາທີ່ແລ່ນຊີງໄຊ ຈະຍາດເອົາລາງວັນບໍ່ໄດ້ ຖ້າບໍ່ປະຕິບັດຕາມກົດລະບຽບ.
[6]ຊາວກະສິກອນທີ່ເຮັດວຽກໜັກ ກໍຄວນເປັນຜູ້ທໍາອິດຜູ້ທໍາອິດທີ່ໄດ້ຮັບຜົນເກັບກ່ຽວ.[7]ຈົ່ງຄິດຕຶກຕອງຂໍ້ຄວາມທີ່ເຮົາເວົ້ານັ້ນ
ໃຫ້ຖີຖ້ວນເພາະອົງພຣະຜູ້ເປັນເຈົ້າຈະຊົງປະທານໃຫ້ເຂົາເຈົ້າເຂົ້າໃຈໃນທຸກສິ່ງ.
[8]ຈົ່ງລະນຶກເຖິງພຣະເຢຊູຄຣິດເຈົ້າ ຜູ້ທີ່ຖືກເຮັດໃຫ້ເປັນຄືນມາຈາກຄວາມຕາຍແລ້ວແລະຜູ້ທີ່ເປັນເຊື້ອສາຍຂອງດາວິດ.
ສິ່ງນີ້ເປັນໄປຕາມສາລະແຫ່ງຂ່າວປະເສີດ ຂອງຂ້າພະເຈົ້າ.[9]ທີ່ຂ້າພະເຈົ້າໄດ້ຍອມທົນທຸກທໍລະມານ ຈົນຖືກລ່າມໂສ້
ເຫມືອນກັບເປັນຄົນຮ້າຍແຕ່ພຣະທັມ ຂອງພຣະເຈົ້າຈະບໍ່ຖືກຜູກມັດໄວ້.[10]ດ້ວຍເຫດນີ້ຂ້າພະເຈົ້າ ຈຶ່ງອົດທົນຕໍ່ທຸກສິ່ງ
ເພື່ອຄົນເຫລົ່ານັ້ນທີ່ໄດ້ຮັບການເລືອກໄວ້ ເພື່ອເຂົາທັງຫລາຍຈະບັນລຸເຖິງຄວາມລອດໃນພຣະເຢຊູຄຣິດເຈົ້າ
ພ້ອມກັບພຣະສະຫງ່າຣາສີອັນເປັນນິຣັນດອນ.
[11]ຄໍາກ່າວນີ້ເຊື່ອຖືໄດ້ຄື: “ຖ້າເຮົາຕາຍກັບພຣະອົງ, ເຮົາກໍຈະມີຊີວິດຢູ່ກັບພຣະອົງ.[12]ເຮົາອົດທົນເຮົາກໍຈະປົກຄອງຮ່ວມກັບພຣະອົງ.
ຖ້າເຮົາປະຕິເສດພຣະອົງ, ພຣະອົງກໍຈະປະຕິເສດເຮົາດ້ວຍເຫມືອນກັນ.[13]ຖ້າເຮົາບໍ່ສັດຊື່ພຣະອົງກໍຍັງຄົງສັດຊື່ເພາະວ່າ
ພຣະອົງບໍ່ສາມາດຈະປະຕິເສດ ພຣະອົງເອງໄດ້.”
[14]ທ່ານຈົ່ງຢ້ຳເຕືອນພວກເຂົາທັງຫລາຍເຖິງສິ່ງຕ່າງໆເຫລົ່ານີ້ ເຕືອນພວກເຂົາ ຢູ່ ຊ້ອງ ພຣະພັກພຣະເຈົ້າບໍ່ໃຫ້ໂຕ້ຖຽງກັນ
ດ້ວຍເລື່ອງຖ້ອຍຄໍາຕ່າງໆ ເພາະວ່າສິ່ງເຫລົ່ານັ້ນ ບໍ່ເປັນປະໂຫຍດອັນໃດ. ເພາະການເຮັດເຊັ່ນນີ້ເປັນການທໍາລາຍຄົນເຫລົ່ານັ້ນທີ່ຮັບຟັງ.
[15]ທ່ານຈົ່ງເຮັດໃຫ້ດີທີ່ສຸດຕໍ່ພຣະເຈົ້າເຫມືອນຜູ້ຫນຶ່ງທີ່ຜ່ານການພິສູດແລ້ວ, ເປັນຄົນງານທີ່ບໍ່ມີເລື່ອງໃດໃຫ້ລະອາຍ
ເປັນຄົນທີ່ສອນຖ້ອຍຄໍາແຫ່ງຄວາມຈິງ ຢ່າງຖືກຕ້ອງ.
[16]ຈົ່ງຫລີກເວັ້ນຈາກການສົນທະນາ, ທີ່ບໍ່ໃຫ້ກຽດພຣະເຈົ້າເພາະນັ້ນຈະນໍາເຮົາໄປສູ່ການດູຫມິ່ນພຣະເຈົ້າຫລາຍຍິ່ງຂຶ້ນ.
[17]ການເວົ້າຈາຂອງພວກເຂົາແຜ່ກະຈາຍໄປເຫມືອນບາດແຜເປື່ອຍເນົ່າ ໃນທ່າມກາງຄົນເຫລົ່ານັ້ນ ຄືຮີເມນາໂຢ ແລະ ຟີເລໂຕ.
[18]ຊາຍເຫລົ່ານີ້ຄືຄົນທີ່ໄດ້ຫລົງໄປ ຈາກຄວາມຈິງພວກເຂົາບອກວ່າການຟື້ນຄືນ ຈາກຄວາມຕາຍໄດ້ເກີດຂຶ້ນແລ້ວ,
ພວກເຂົາເຮັດໃຫ້ຄວາມເຊື່ອຂອງບາງຄົນລົ້ມລະລາຍໄປ.
[19]ຢ່າງໃດກໍຕາມ, ຮາກຖານທີ່ຫມັ້ນຄົງຂອງພຣະເຈົ້າ ກໍຕັ້ງໝັ້ນຄົງຢູ່. ມີຄໍາຂຽນ ໄວ້ວ່າ, “ອົງພຣະຜູ້ເປັນເຈົ້າ
ຮູ້ຈັກຄົນເຫລົ່ານັ້ນທີ່ເປັນຄົນຂອງພຣະອົງ” ແລະ “ທຸກຄົນທີ່ເອີ້ນພຣະນາມ
ຂອງອົງພຣະຜູ້ເປັນເຈົ້າຈະຕ້ອງແຍກຕົວອອກຈາກຄວາມຊົ່ວຊ້າ.”[20]ໃນບ້ານຂອງຄົນຮັ່ງມີບໍ່ໄດ້ມີແຕ່ພາຊະນະທີ່ເຮັດດ້ວຍເງິນ ແລະ ຄໍາ
ເທົ່ານັ້ນແຕ່ຍັງມີ ພາຊະນະທີ່ເຮັດຈາກໄມ້ ແລະ ດິນຫນຽວ ພາຊະນະ ບາງຢ່າງກໍໃຊ້ ສໍາລັບງານທີ່ມີກຽດ ແລະ
ບາງຢ່າງໃຊ້ສໍາລັບງານທີ່ບໍ່ມີກຽດ.[21]ຖ້າຜູ້ໃດຊໍາລະຕົວຂອງເຂົາຈາກສິ່ງທີ່ບໍ່ມີກຽດເຂົາກໍເປັນພາຊະນະທີ່ມີກຽດ
ເຂົາຈະຖືກແຍກອອກຈາກພາຊະນະອື່ນເພື່ອເປັນພາຊະນະທີ່ໃຊ້ປະໂຫຍດ ໄດ້ສໍາລັບອົງເຈົ້ານາຍ, ແລະ ພ້ອມສໍາລັບການດີທຸກຢ່າງ.
[22]ຈົ່ງຫລີກໜີຈາກ ຣາຄະຕັນຫາຂອງຄົນໜຸ່ມສາວ ຈົ່ງຍຶດເອົາຄວາມຊອບທໍາ, ຄວາມເຊື່ອ, ຄວາມຮັກ ແລະ ສັນຕິສຸກ
ພ້ອມກັບຄົນເຫລົ່ານັ້ນທີ່ຮ້ອງອອກພຣະນາມ ຂອງອົງພຣະຜູ້ເປັນເຈົ້າດ້ວຍຫົວໃຈທີ່ບໍລິສຸດ.[23]ແຕ່ຈົ່ງປະຕິເສດຄໍາຖາມທີ່ໂງ່ງ່າວ ແລະ
ຂາດຄວາມຮູ້ເພາະທ່ານຮູ້ວ່າຄໍາຖາມເລົ່ານີ້ ກໍໃຫ້ເກີດການຜິດຖຽງກັນ.
[24]ຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າ ຈະຕ້ອງບໍ່ວິວາດຜິດຖຽງກັນ, ແຕ່ເປັນຄົນທີ່ສຸພາບຕໍ່ຄົນທັງປວງ ສາມາດສອນຄົນອື່ນໄດ້ ແລະ
ມີຄວາມອົດທົນ[25]ເຂົາຕ້ອງເປັນຄົນທີ່ໃຫ້ຄວາມຮູ້ແກ່ຄົນທີ່ຕໍ່ຕ້ານເຂົາດ້ວຍຄວາມສຸພາບອ່ອນໂຍນ
ເພື່ອວ່າພຣະເຈົ້າຈະເຮັດໃຫ້ຄົນເຫລົ່ານັ້ນກັບໃຈໂດຍຄວາມຮູ້ເຖິງຄວາມຈິງໄດ້.[26]ພວກເຂົາອາດຈະກັບເປັນຄົນທີ່ມີສະຕິອີກຄັ້ງ ແລະ
ຫລຸດພົ້ນຈາກບ່ວງແຮ້ວຂອງມານຮ້າຍ ຫລັງຈາກທີ່ພວກເຂົາຖືກຈັບໂດຍມານຮ້າຍເພື່ອໃຫ້ເຮັດຕາມຄວາມປະສົງ ຂອງມັນ.


generated on Tue Jun 17 19:01:42 2025

# 3

[1]ແຕ່ຈົ່ງຮູ້ວ່າໃນຊ່ວງເວລາສຸດທ້າຍ ຈະມີເວລາຄວາມຍາກລຳບາກເກີດຂຶ້ນ[2]ເພາະວ່າຄົນຈະຮັກຕົວເອງ, ຮັກເງິນຄຳ, ໂອ້ອວດຈອງຫອງ,
ກ່າວຮ້າຍຜູ້ອື່ນບໍ່ເຊື່ອຟັງຄວາມພໍ່ແມ່, ເນຣະຄຸນ, ແລະ ບໍ່ມີສິນທັມ;[3]ພວກເຂົາຈະຢູ່ໂດຍຂາດຈາກຄວາມຮັກຕາມທຳມະຊາດ, ບໍ່ສະຫງົບສຸກ
ໃສ່ຮ້າຍປ້າຍສີ ຂາດການຮູ້ຈັກບັງຄັບຕົນ, ໃຊ້ຄວາມຮຸນແຮງ ບໍ່ຮັກສິ່ງທີ່ດີ,[4]ພວກເຂົາຈະເປັນຄົນທໍຣະຍົດ, ດື້ດ້ານ, ອວດສະຫາວ
ຮັກຄວາມສະໜຸກສະຫນານຫລາຍກວ່າຮັກພຣະເຈົ້າ.

[5]ພາຍນອກພວກເຂົາເບິ່ງເໝືອນຄົນທີ່ເຊື່ອໃນພຣະເຈົ້າ ແຕ່ເຂົາປະຕິເສດຣິດເດດຂອງຜູ້ທີ່ເຂົາເຊື່ອນັ້ນຈົ່ງຫລີກຫນີເສຍຈາກຄົນຢ່າງນັ້ນ.
[6]ເພາະວ່າບາງຄົນໃນພວກເຂົາ ຄືພວກຜູ້ຊາຍທີ່ໄດ້ເຂົ້າໄປໃນບ້ານເຮືອນ ແລະ ຫລົງໄຫລໃນຜູ້ຍິງທີ່ໂງ່ງ່າວ
ຜູ້ຍິງເຫລົ່ານີ້ຄືຄົນທີ່ມັກສຸມກອງຄວາມບາບເອົາໄວ້ ແລະ ຖືກຊັກຈູງດ້ວຍຄວາມປາຖະຫນາຕ່າງໆ,
[7]ຜູ້ຍິງເຫລົ່ານີ້ຈະຍອມຮຽນຮູ້ຢູ່ສະເຫມີແຕ່ພວກເຂົາບໍ່ເຄີຍເຂົ້າເຖິງຄວາມຮູ້ໃນເລື່ອງຄວາມຈິງເລີຍ.
[8]ເຫມືອນກັບທີ່ຢາເນກັບຢຳເບ ໄດ້ລຸກຂຶ້ນຕໍ່ຕ້ານໂມເຊພວກຜູ້ສອນປອມເຫຼົ່ານີ້ ກໍໄດ້ຢືນຂຶ້ນຕໍ່ຕ້ານຄວາມຈິງພວກເຂົາເປັນຄົນທີ່ມີຈິດໃຈຊົ່ວຮ້າຍ
ແລະ ຄວາມເຊື່ອ ຂອງເຂົາ ກໍໃຊ້ການບໍ່ໄດ້ເລີຍ,[9]ແຕ່ພວກເຂົາຈະບໍ່ກ້າວໜ້າໄປໄກເພາະວ່າ ຄວາມໂງ່ງ່າວຂອງພວກເຂົາຈະປາກົດແຈ້ງ
ແກ່ຄົນທັງປວງເໝືອນ ກັບພວກຜູ້ຊາຍ ເຫລົ່ານັ້ນ.
[10]ແຕ່ສຳລັບທ່ານໆໄດ້ເຮັດຕາມຄຳສອນຂອງຂ້າພະເຈົ້າ ຄືການປະພຶດ, ເປົ້າຫມາຍຂອງຊີວິດ, ຄວາມເຊື່ອ, ຄວາມອົດທົນດົນນານ, ຄວາມຮັກ,
ແລະ ຄວາມອົດກັ້ນ.[11]ການຖືກຂົ່ມເຫັງ ການທຸກລຳບາກ ແລະ ສິ່ງທີ່ເກີດຂຶ້ນກັບຂ້າພະເຈົ້າທີ່ເມືອງ ອັນຕີໂອເຂຍ ທີ່ເມືອງອີໂກນີອົມ ແລະ
ທີ່ເມືອງລີສະຕຣາ ຂ້າພະເຈົ້າໄດ້ອົດທົນຕໍ່ການຂົ່ມເຫັງໃນເຫດການທັງປວງ
ອົງພຣະຜູ້ເປັນເຈົ້າໄດ້ຊ່ວຍຊີວິດຂ້າພະເຈົ້າ[12]ແຕ່ຄົນທັງປວງເຫລົ່ານັ້ນ ທີ່ຕ້ອງການດຳເນີນ
ຊີວິດຢ່າງຄົນຊອບທັມໃນພຣະເຢຊູຄຣິດເຈົ້າຈະຕ້ອງຖືກກົດຂີ່ຂົ່ມເຫັງ,[13]ຄົນຊົ່ວຮ້າຍ ແລະ ຄົນຫລອກລວງຈະເພີ່ມທະວີຫລາຍຂຶ້ນ
ຍິ່ງກວ່າຄົນທີ່ນຳຜູ້ອື່ນໃຫ້ຫລົງຜິດພວກເຂົາກໍນຳໃຫ້ຕົນເອງຫລົງຜິດດ້ວຍ.
[14]ແຕ່ສຳລັບທ່ານຈົ່ງດຳລົງຢູ່ໃນສິ່ງທີ່ທ່ານໄດ້ຮຽນຮູ້ ແລະ ເຊື່ອຢ່າງໝັ້ນຄົງ ທ່ານຮູ້ວ່າທ່ານໄດ້ຮຽນມາຈາກຜູ້ໃດ.[15]ຖ້ອຍຄຳບັນທຶກອັນສັກສິດ
ສິ່ງເຫລົ່ານີ້ສາມາດເຮັດໃຫ້ທ່ານເຕັມລົ້ນດ້ວຍປັນຍາໃນເລື່ອງຂອງ ຄວາມພົ້ນຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດເຈົ້າ.
[16]ພຣະຄັມພີທຸກຂໍ້ໄດ້ຮັບການດົນໃຈໂດຍພຣະເຈົ້າ ຊຶ່ງເປັນປະໂຫຍດ ຕໍ່ຫລັກຄຳສອນ, ຄວາມເຊື່ອອັນແຮງກ້າ ການປັບປຸງແກ້ໄຂ ແລະ
ການຝຶກຝົນໃນຄວາມ ຊອບທັມ,[17]ນີ້ກໍເພື່ອວ່າຄົນຂອງພຣະເຈົ້າ ຈະເປັນຄົນທີ່ມີຄວາມສາມາດ ຕຽມ ພ້ອມສຳລັບການດີທຸກຢ່າງ.


generated on Tue Jun 17 19:01:42 2025

4 [1]ຂ້າພະເຈົ້າໃຫ້ຄຳສັ່ງທີ່ສຳຄັນຕໍ່ພຣະພັກພຣະເຈົ້າ ແລະ ພຣະເຢຊູຄຣິດເຈົ້າ, ຜູ້ທີ່ ພິພາກສາທັງຄົນເປັນ ແລະຄົນຕາຍ ແລະ
ເພາະໂດຍການມາປາກົດຂອງພຣະອົງແລະ ຣາຊອານາຈັກຂອງພຣະອົງ.[2]ຈົ່ງສັ່ງສອນພຣະທັມຈົ່ງພ້ອມຢູ່ສະເຫມີທັງໃນເວລາທີ່ມີໂອກາດ
ແລະ ບໍ່ມີໂອກາດ, ຈົ່ງວ່າກ່າວຈົ່ງເຕືອນສະຕິ ດ້ວຍຄວາມອົດທົນແລະ ການສິດສອນທຸກຢ່າງ.

[3]ເພາະເວລານັ້ນຈະມາເຖິງເມື່ອຄົນບໍ່ຍອມຟັງຄຳສອນທີ່ດີແຕ່ເຂົາຈະສະສົມອາຈານສອນຂອງຕົນຕາມ ແຕ່ຄວາມປາຖະໜາຂອງເຂົາເອງ
ເພື່ອບັນເທົາອາການຄັນຫູຂອງພວກເຂົາ.[4]ພວກເຂົາຈະຫັນໄປຈາກຄວາມຈິງແລ້ວໄປສົນໃຈນິຍາຍ ເລື່ອງເປົ່າໆ.
[5]ແຕ່ສຳລັບທ່ານຈົ່ງມີຄວາມຄິດທີ່ສຸຂຸມໃນທຸກໆສິ່ງຈົ່ງຍອມທົນ ທຸກໃນຄວາມຍາກລຳບາກ ແລະ ຈົ່ງເຮັດໜ້າທີ່ຂອງຜູ້ປະກາດ
ຂ່າວປະເສີດປະຕິບັດ ໜ້າທີ່ ການຮັບໃຊ້ຂອງທ່ານໃຫ້ ຄົບບໍລິບູນ.
[6]ເພາະຂ້າພະເຈົ້າກຳລັງຖືກເທອອກເວລາທີ່ຕ້ອງຈາກໄປນັ້ນມາເຖິງແລ້ວ[7]ຂ້າພະເຈົ້າໄດ້ແລ່ນແຂ່ງຂັນ
ຢ່າງດີຈົນສຳເລັດຂ້າພະເຈົ້າແລ່ນຈົນເຖິງເສັ້ນໄຊ
ຂ້າພະເຈົ້າຮັກສາຄວາມເຊື່ອຈົນເຖິງທີ່ສຸດ[8]ມົງກຸດແຫ່ງຄວາມຊອບທຳໄດ້ຖືກຕຽມໄວ້ໃຫ້ກັບຂ້າພະເຈົ້າຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາທີ່ຍຸດຕິທຳຈະມອບໃຫ້ແກ່
ຂ້າພະເຈົ້າໃນວັນນັ້ນ. ແຕ່ບໍ່ແມ່ນແກ່ຂ້າພະເຈົ້າເທົ່ານັ້ນແຕ່ສຳລັບຄົນທັງຫລາຍທີ່ຮັກໃນການຊົງມາປາກົດຂອງພຣະອົງດ້ວຍ.
[9]ທ່ານຈົ່ງພະຍາຍາມມາຫາ ຂ້າພະເຈົ້າໃຫ້ໄວທີ່ສຸດ[10]ເພາະວ່າເດມາ ໄດ້ ປະຖິ້ມຂ້າພະເຈົ້າເສັຍແລ້ວ. ເຂົາຮັກໂລກປະຈຸບັນນີ້ ແລະ
ໄດ້ໄປຍັງເມືອງ ເທສະໂລນິກ. ເກເຊັນ ໄດ້ໄປທີ່ເມືອງຄາລາເຕຍ ແລະ ສ່ວນຕີໂຕໄປຍັງເມືອງດັນມາເຕຍ.
[11]ຕອນນີ້ມີພຽງແຕ່ ລູກາ ທີ່ຢູ່ກັບຂ້າພະເຈົ້າທ່ານຈົ່ງໄປຫາມາຣະໂກ ແລະ ພາເຂົາໄປດ້ວຍ ເພາະເຂົາມີປະໂຫຍດຢ່າງຫລາຍ
ຕໍ່ງານຂອງຂ້າພະເຈົ້າ[12]ຂ້າພະເຈົ້າສົ່ງ ຕີຂີໂກ ໄປຍັງເມືອງເອເຟໂຊ.[13]ເມື່ອທ່ານມາກໍໃຫ້ນຳເສື້ອຄຸມ ທີ່ຂ້າພະເຈົ້າປະໄວ້ກັບ ກາລະໂປ
ທີ່ເມືອງໂທອາດ ແລະ ໜັງສືເປັນຕົ້ນ ມ້ວນໜັງສືທີ່ເປັນໜັງສັດ.
[14]ອາເລັກຊັນເດີ ຊ່າງເຮັດເຄື່ອງທອງແດງ ໄດ້ເຮັດການຊົ່ວຮ້າຍຕໍ່ຕ້ານຂ້າພະເຈົ້າຫລາຍຢ່າງ
ອົງພຣະຜູ້ເປັນເຈົ້າຈະຕອບແທນການກະທຳຂອງເຂົາ.[15]ແຕ່ທ່ານເອງ ກໍຄວນປ້ອງກັນຕົວ ທ່ານຈາກເຂົາດ້ວຍ
ເພາະວ່າເຂົາຕໍ່ຕ້ານຖ້ອຍຄຳຂອງເຮົາ ຢ່າງຮຸນແຮງ.[16]ໃນການແກ້ຄະດີ ເທື່ອທຳອິດນັ້ນ ບໍ່ມີຜູ້ໃດຢູ່ກັບຂ້າພະເຈົ້າເຂົາທັງຫລາຍປະຖິ້ມ
ຂ້າພະເຈົ້າໄວ້ແຕ່ພຽງຜູ້ດຽວ ຂໍຢ່າໃຫ້ພວກເຂົາຖືກນັບວ່າຜິດເລີຍ.
[17]ແຕ່ອົງພຣະຜູ້ເປັນເຈົ້າຊົງຢູ່ກັບຂ້າພະເຈົ້າ ແລະ ເສີມກຳລັງຂ້າພະເຈົ້າ ເພື່ອວ່າໂດຍຜ່ານຂ້າພະເຈົ້ານັ້ນການປະກາດຂ່າວປະເສີດ
ຈະໄດ້ສຳເລັດຢ່າງສົມບູນ ແລະ ຄົນຕ່າງຊາດທັງປວງໄດ້ຍິນ ຂ້າພະເຈົ້າໄດ້ຮັບການຊ່ວຍເຫລືອອອກຈາກປາກຂອງສິງໂຕ.
[18]ອົງພຣະຜູ້ເປັນເຈົ້າຈະຊ່ວຍຂ້າພະເຈົ້າຈາກສິ່ງຊົ່ວຮ້າຍທຸກຢ່າງ ແລະ ປົກປ້ອງຂ້າພະເຈົ້າໄວ້ສຳລັບ ອານາຈັກແຫ່ງແຜ່ນດິນສະຫວັນ
ຂໍພຣະສະຫງ່າຣາສີຈົ່ງມີແກ່ ພຣະອົງຕະຫລອດໄປເປັນນິດເທີ້ນ ອາແມນ.
[19]ເຮົາຂໍຝາກຄວາມຄິດເຖິງໄປເຖິງ ປີຊະກີລາ ກັບ ອາກີລາ ແລະ ຄອບຄົວຂອງ ໂອເນຊີໂຟໂຣ.[20]ເອຣາຊະໂຕ ຍັງຢູ່ທີ່ເມືອງໂກຣິນໂທ
ແຕ່ຂ້າພະເຈົ້າໄດ້ປະ ໂທຟີໂມ ທີ່ປ່ວຍຢູ່ໄວ້ທີ່ເມືອງ ມີເລໂຕ[21]ຂໍທ່ານພະຍາຍາມມາໃຫ້ໄວທີ່ສຸດກ່ອນຈະເຖິງລະດູໜາວ. ຢູບູໂລ,
ໄດ້ຝາກຄວາມຄິດເຖິງມາເຖິງທ່ານດ້ວຍລວມທັງ ປູເດັນ, ລີໂນ, ກະໂລເດຍ ແລະພີ່ນ້ອງ ຄົນອື່ນໆ.[22]ຂໍອົງພຣະຜູ້ເປັນເຈົ້າຈົ່ງ
ສະຖິດຢູ່ກັບວິນຍານຂອງທ່ານ ຂໍໃຫ້ພຣະຄຸນສະຖິດຢູ່ກັບທ່ານດ້ວຍ.

# ຕີໂຕ

1 [1]ຂ້າພຣະເຈົ້າ ໂປໂລ, ຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ອັກຄະສາວົກ ຂອງອົງພຣະເຢຊູຄຣິດເຈົ້າ,
ເພື່ອຄວາມເຊື່ອຂອງບັນດາຜູ້ທີ່ພຣະເຈົ້າໄດ້ຊົງ ເລືອກໄວ້ ແລະ ຄວາມຮູ້ແຫ່ງຄວາມຈິງທີ່ສອດຄ່ອງຕໍ່ (ຄວາມເປັນເຫມືອນພຣະເຈົ້າ).
[2]ສິ່ງເຫລົ່ານີ້ຢູ່ໃນຄວາມເຊື່ອຫມັ້ນຂອງຊີວິດນິຣັນດອນ ຊຶ່ງພຣະເຈົ້າ, ຜູ້ບໍ່ຊົງກ່າວຄຳ
ຕົວະນັ້ນໄດ້ຊົງສັນຍາໄວ້ຕັ້ງແຕ່ກ່ອນຍຸກສະໄຫມທັງປວງ[3]ຄືໃນເວລາທີ່ເຫມາະສົມ, ພຣະອົງກໍໄດ້ເປີດເຜີຍເຖິງຖ້ອຍຄຳຂອງພຣະອົງ
ດ້ວຍຂໍ້ຄວາມທີ່ຂ້າພຣະເຈົ້າໄດ້ຮັບຄວາມໄວ້ວາງໃຈຈາກພຣະອົງໃຫ້ມອບຕໍ່ ຂ້າພຣະເຈົ້າກະທຳສິ່ງນີ້ເພາະເປັນຄຳສັ່ງຂອງພຣະເຈົ້າ
ພຣະຜູ້ຊ່ວຍໃຫ້ພົ້ນ ຂອງພວກເຮົາ.

[4]ເຖິງຕີໂຕ, ຜູ້ເປັນລູກແທ້ໃນທາງຄວາມເຊື່ອດຽວກັນນີ້. ຂໍພຣະຄຸນ ແລະ ສັນຕິສຸກ ຈາກພຣະເຈົ້າພຣະບິດາ ແລະ ພຣະເຢຊູຄຣິດເຈົ້າ
ພຣະຜູ້ຊ່ວຍໃຫ້ພົ້ນ ຂອງພວກເຮົາ[5]ດ້ວຍເຫດຜົນນີ້ເອງ ຂ້າພຣະເຈົ້າຈຶ່ງໄດ້ປະທ່ານໄວ້ໃນເມືອງກະເຣເຕ,
ເພື່ອໃຫ້ທ່ານຈັດການສິ່ງຕ່າງໆທີ່ຍັງຄ້າງຄາຢູ່ ແລະ ແຕ່ງຕັ້ງພວກຜູ້ປົກຄອງໄວ້ໃນທຸກໆເມືອງ ດັ່ງທີ່ຂ້າພຣະເຈົ້າໄດ້ແນະນຳທ່ານໄວ້.
[6]ພວກຜູ້ປົກຄອງນັ້ນ ຕ້ອງເປັນຜູ້ທີ່ບໍ່ມີຂໍ້ ຕິຕຽນ, ມີເມັຽພຽງຄົນດຽວ, ແລະລູກຂອງເຂົາຕ້ອງເປັນຄົນສັດຊື່ ບໍ່ຖືກກ່າວຫາວ່າເປັນນັກເລງ ຫລື
ເປັນຄົນດື້ດ້ານ.[7]ຕ້ອງບໍ່ມີຂໍ້ຕຳຫນິ. ຕ້ອງບໍ່ເປັນຄົນຈອງຫອງ, ບໍ່ເປັນຄົນເລືອດຮ້ອນ, ບໍ່ຕິດເຫລົ້າ, ບໍ່ເປັນຄົນອັນທະພານ, ບໍ່ເປັນຄົນໂລບ.
[8]ແຕ່ເຂົາຕ້ອງເປັນຄົນ ທີ່ມີໃຈກວ້າງຂວາງ, ຮັກທີ່ຈະກະທຳຄວາມດີມີເຫດຜົນ, ເປັນຄົນຊອບທັມດຳເນີນຊີວິດໃນທາງຂອງພຣະເຈົ້າ,
ແລະຮູ້ຈັກບັງຄັບຕົນເອງໄດ້.[9]ເຂົາຈະຕ້ອງຍຶດຂໍ້ຄວາມອັນຫນ້າເຊື່ອຖືຊຶ່ງໄດ້ຮັບການສອນ,
ມາໄວ້ຫນຽວແຫນ້ນເພື່ອວ່າຈະສາມາດເສີມສ້າງຜູ້ອື່ນໄດ້ດ້ວຍການສອນທີ່ດີ ແລະຕຳນິບັນດາຜູ້ທີ່ຄັດຄ້ານລາວໄດ້.
[10]ເພາະວ່າມີຜູ້ທີ່ບໍ່ເຊື່ອຫລວງຫລາຍ, ເປັນຕົ້ນພວກທີ່ເຂົ້າພິທີຕັດ. ຄຳເວົ້າຂອງພວກເຂົາເຫລົ່ານີ້ນັບວ່າໄຮ້ປະໂຫຍດ. ພວກເຂົາໄດ້ນຳ
ແລະຫລອກລວງຄົນອື່ນໃຫ້ຫລົງຜິດ.
[11]ພວກເຂົາສອນໃນສິ່ງທີ່ບໍ່ຄວນຈະສອນກໍເພື່ອຜົນປະໂຫຍດອັນຫນ້າລະອາຍແລະປັ່ນປ່ວນທຳລາຍຄຣິສຕະຈັກທັງຄຣິສຕະຈັກ.
[12]ຜູ້ທຳນວາຍຂອງພວກເຂົາຄົນຫນຶ່ງໄດ້ກ່າວວ່າ, "ຊາວກະເຣເຕ ເປັນຄົນມັກເວົ້າຕົວະ, ເປັນຄົນໂຫດຮ້າຍເຫມືອນສັດປ່າ,
ເປັນຄົນຂີ້ຄ້ານແລະກິນຫລາຍ."[13]ຄຳທີ່ພວກເຂົາກ່າວນີ້ເປັນຄວາມຈິງ, ເຫດນັ້ນ
ເຈົ້າຈົ່ງສັ່ງສອນພວກເຂົາຢ່າງເຂັ້ມງວດເພື່ອວ່າພວກເຂົາຈະໄດ້ມີຄວາມເຊື່ອຢ່າງຖືກຕ້ອງ.

[14]ຈົ່ງຢ່າໃສ່ໃຈກັບນິຍາຍປະລຳປະລາຂອງພວກຢິວ ແລະ ກົດບັນຍັດ ຂອງມະນຸດທີ່ປະຕິເສດ ຄວາມຈິງ.
[15]ສຳລັບຜູ້ທີ່ບໍຣິສຸດນັ້ນ, ທຸກສິ່ງກໍບໍຣິສຸດ. ແຕ່ສຳລັບຄົນທີ່ມີມົນທິນແລະ ຄົນທີ່ບໍ່ ເຊື່ອນັ້ນ, ກໍບໍ່ມີອັນໃດທີ່ບໍຣິສຸດ.
ເພາະຄວາມຄິດແລະຈິດໃຈໃຕ້ສຳນຶກຂອງພວກເຂົາ ນັ້ນເປັນມົນທິນ.[16]ພວກເຂົາອ້າງຕົນວ່າຮູ້ຈັກພຣະເຈົ້າ,
ແຕ່ການກະທຳຂອງພວກເຂົາປະຕິເສດພຣະອົງ ພວກເຂົາ ເປັນຄົນທີ່ໜ້າລັງກຽດ, ແລະ ບໍ່ເຊື່ອຟັງ.
ພວກເຂົາບໍ່ເປັນທີ່ຍອມຮັບໃນການເຮັດຄວາມດີອັນໃດ.


generated on Tue Jun 17 19:01:42 2025

2 [1]ແຕ່ທ່ານເອງ, ຈົ່ງເວົ້າໃນສິ່ງສອດຄ່ອງກັບຫລັກຄໍາສອນທີ່ສັດຊື່.[2]ຜູ້ຊາຍທີ່ອາວຸໂສ ຄວນຈະເປັນຜູ້ຮູ້ຈັກ ບັງຄັບຕົນໄດ້, ມີກຽດ ມີເຫດຜົນ,
ເປັນຄົນມີ ຄວາມເຊື່ອຢ່າງຖືກຕ້ອງ, ມີຄວາມຮັກ ແລະ ຄວາມອົດທົນ.

[3]ເຊັ່ນດຽວກັນນີ້ ຍິງທີ່ອາວຸໂສຄວນສະແດງຕົນໃຫ້ເປັນທີ່ຫນ້ານັບຖືບໍ່ກ່າວນິນທາໃສ່ຮ້າຍປ້າຍສີ.
ພວກເຂົາບໍ່ຄວນຕົກເປັນທາດຂອງການດື່ມຄວນສອນແຕ່ສິ່ງທີ່ດີແລະຖືກຕ້ອງ.
[4]ເພື່ອຊ່ວຍຝຶກໃຫ້ພວກຍິງສາວທັງຫລາຍໃຫ້ຮັກຜົວແລະລູກຂອງຕົນຢ່າງເຫມາະສົມ.[5]ພວກນາງຄວນຝຶກຍິງສາວໃຫ້ເປັນຄົນມີເຫດຜົນ, ເປັນ
ຄົນບໍຣິສຸດ, ເອົາໃຈໃສ່ໃນວຽກບ້ານການເຮືອນ, ແລະເຊື່ອຟັງຜົວຂອງຕົນ
ໃຫ້ພວກເຂົາປະຕິບັດເຊັ່ນນີ້ເພື່ອພຣະທັມຂອງພຣະເຈົ້າຈະບໍ່ຖືກຫມິ່ນປະຫມາດ.
[6]ໃນທໍານອງດຽວກັນ, ຈົ່ງຕັກເຕືອນພວກ ຊາຍຫນຸ່ມ ໃຫ້ໃຊ້ຊີວິດຢ່າງມີເຫດຜົນ.[7]ຈົ່ງເປັນແບບຢ່າງໃນການກະທໍາດີທຸກປະການ; ແລະ
ເມື່ອທ່ານສອນ, ກໍ ຈົ່ງສະແດງເຖິງຄວາມສັດຊື່ສຸດຈະຣິດ ແລະ ກຽດສັກສີ.[8]ຈົ່ງເວົ້າຂໍ້ຄວາມທີ່ດີຖືກຕ້ອງ ແລະ ບໍ່ມີຄໍາຕິຕຽນ,
ເພື່ອວ່າບັນດາຜູ້ທີ່ໄດ້ຂັດຂວາງເຈົ້ານັ້ນ ຈະໄດ້ ຮັບຄວາມອັບອາຍ, ເພາະເຂົາບໍ່ມີສິ່ງໃດ ທີ່ຈະເວົ້າວ່າຮ້າຍໃຫ້ພວກທ່ານໄດ້.
[9]ບັນດາທາດຮັບໃຊ້ ຄວນອ່ອນນ້ອມເຊື່ອຟັງຕໍ່ນາຍຂອງຕົນໃນທຸກເລື່ອງ. ພວກເຂົາຄວນຈະເອົາໃຈແລະບໍ່ໂຕ້ຖຽງຄວາມນາຍຂອງຕົນ,
[10]ພວກເຂົາບໍ່ຄວນເປັນຄົນລັກໂລບ. ແຕ່ ພວກເຂົາຄວນສະແດງເຖິງຄວາມເຊື່ອທີ່ດີທຸກປະການ
ເພື່ອວ່າພວກເຂົາຈະສາມາດເຮັດໃຫ້ຄໍາສອນຂອງພວກເຮົາໃນເລື່ອງພຣະເຈົ້າ
ພຣະຜູ້ຊ່ວຍໃຫ້ພົ້ນຂອງເຮົາທັງຫລາຍນັ້ນເປັນທີ່ຫນ້າສົນໃຈໃນທຸກທາງ.
[11]ເພາະວ່າພຣະຄຸນຂອງພຣະເຈົ້າ ໄດ້ຊົງເປີດເຜີຍຕໍ່ຄົນທັງປວງ.[12]ພຣະຄຸນ ນັ້ນຊ່ວຍຝຶກໃຫ້ພວກເຮົາປະຕິເສດທໍາສິ່ງຊົ່ວຮ້າຍ ແລະ
ຕັນຫາຂອງໂລກນີ້. ທັງຍັງຊ່ວຍໃຫ້ເຮົາດໍາເນີນຊີວິດຢ່າງໃນຍຸກນີ້ໄດ້ຢ່າງມີເຫດຜົນ ຢ່າງຊອບທັມ ແລະ ດໍາເນີນຢູ່ໃນທາງຂອງພຣະເຈົ້າ,
[13]ໃນຂະນະທີ່ພວກເຮົາກໍາລັງລໍຄອຍທີ່ຈະໄດ້ຮັບ ຄວາມຫວັງແຫ່ງພຣະພອນຂອງພຣະອົງ, ຄືພຣະສະຫງ່າຣາສີ ຂອງພຣະເຈົ້າອົງຍິ່ງໃຫຍ່
ຄືພຣະເຢຊູຄຣິດເຈົ້າ ພຣະຜູ້ໂຜດໃຫ້ພົ້ນຂອງພວກເຮົາ. ທີ່ຈະມາປາກົດ.
[14]ພຣະເຢຊູຄຣິດເຈົ້າໄດ້ ສະຫລະພຣະອົງເອງ ໃຫ້ກັບພວກເຮົາ ເພື່ອໄຖ່ເອົາພວກເຮົາ ໃຫ້ພົ້ນຈາກຄວາມຊົ່ວຮ້າຍທັງຫມົດ ແລະ
ຊໍາຣະພວກເຮົາໃຫ້ບໍຣິສຸດ, ເພື່ອພຣະອົງເອງນັ້ນເຮົາຈຶ່ງເປັນຄົນພິເສດ, ທີ່ມີໃຈຮ້ອນຮົນໃນການເຮັດຄວາມດີ.
[15]ຈົ່ງກ່າວເຖິງແລະໃຫ້ກໍາລັງໃຈ. ດ້ວຍສິ່ງເຫລົ່ານີ້ ຈົ່ງຕັກເຕືອນ ດ້ວຍສິດທິອໍານາດທຸກປະການ ຢ່າໃຫ້ຜູ້ໃດຫມິ່ນປະຫມາດເຈົ້າໄດ້.


generated on Tue Jun 17 19:01:42 2025

3 1ຈົ່ງເຕືອນພວກເຂົາໃຫ້ຢູ່ໃຕ້ບັງຄັບຜູ້ປົກຄອງ ແລະ ຜູ້ມີອຳນາດທັງຫລາຍ, ໃຫ້ເຂົາເຊື່ອຟັງຄົນເຫລົ່ານັ້ນ ພ້ອມທີ່ຈະເຮັດການດີທຸກຢ່າງ.
2ຈົ່ງເຕືອນພວກເຂົາ ຢ່າໃຫ້ໃສ່ຮ້າຍປ້າຍສີຜູ້ໃດ, ບໍ່ຜິດຖຽງກັນ, ແຕ່ຍອມໃຫ້ຜູ້ອື່ນທຳຕາມວິທີການຂອງຕົນ, ແລະ
ສະແດງຄວາມຖ່ອມໃຈຕໍ່ຄົນທັງປວງ.

3ເພາະວ່າເມື່ອກ່ອນ ພວກເຮົາເອງກໍເປັນ ຄົນໂງ່, ແລະບໍ່ເຊື່ອຟັງ. ພວກເຮົາຖືກຫລອກລວງໃຫ້ຫລົງຜິດ, ແລະຕົກເປັນທາດຂອງກິເລດຕັນຫາ
ແລະຄວາມປາຖນານາໆປະການ, ພວກເຮົາເຄີຍໃຊ້ຊີວິດໃນທາງຊົ່ວ ແລະຄວາມເຫິງສາ. ພວກເຮົາເປັນຄົນຫນ້າລັງກຽດ ແລະ ກຽດຊັງກັນ
ແລະ ກັນ.
4-5ແຕ່ເມື່ອ ພຣະເມດຕາຂອງພຣະເຈົ້າ ພຣະ ຜູ້ຊ່ວຍເຮົາທັງຫລາຍໃຫ້ພົ້ນແລະຄວາມຮັກຂອງພຣະອົງໄດ້ມາປາກົດຕໍ່ມວນມະນຸດນັ້ນ
ບໍ່ໄດ້ເກີດຈາກງານແຫ່ງຄວາມຊອບທັມທີ່ ພວກເຮົາເຮັດ, ແຕ່ເປັນເພາະຄວາມເມດຕາຂອງພຣະອົງ ທີ່ພຣະອົງຊ່ວຍໃຫ້ພວກເຮົາພົ້ນ.
ພຣະອົງຊ່ວຍໃຫ້ພວກເຮົາພົ້ນໄດ້ດ້ວຍການຊົງຊຳຣະຂອງການບັງເກີດໃຫມ່ ແລະການສ້າງຂຶ້ນໃຫມ່ໂດຍພຣະວິນຍານບໍຣິສຸດເຈົ້າ.
6ພຣະເຈົ້າ ໄດ້ຖອກເທພຣະວິນຍານບໍຣິສຸດເຈົ້າ ມາເຫນືອພວກເຮົາຢ່າງລົ້ນເຫລືອ ຜ່ານທາງພຣະເຢຊູຄຣິດເຈົ້າ,
ພຣະຜູ້ຊ່ວຍໃຫ້ພົ້ນຂອງພວກເຮົາ,7ພຣະອົງໄດ້ເຮັດໃຫ້ພວກເຮົາໄດ້ນັບວ່າເປັນຄົນຊອບທັມດ້ວຍພຣະຄຸນຂອງພຣະອົງເຊັ່ນນີ້,
ກໍເພື່ອວ່າພວກເຮົາຈະໄດ້ເປັນຜູ້ຮັບມໍຣະດົກດ້ວຍຄວາມເຊື່ອຫມັ້ນໃນຊີວິດອັນເປັນນິຣັນດອນ.
8ຂໍ້ຄວາມນີ້ເປັນຄວາມຈິງ. ຂ້າພຣະເຈົ້າຢາກໃຫ້ທ່ານກ່າວຢ່າງຫມັ້ນໃຈເຖິງເລື່ອງເຫລົ່ານີ້,
ເພື່ອວ່າຄົນທັງຫລາຍທີ່ເຊື່ອວາງໃຈໃນພຣະເຈົ້າຈະຍຶດຫມັ້ນໃນການເຮັດສິ່ງດີ. ທີ່ພຣະເຈົ້າໄດ້ວາງໄວ້ຕໍ່ຫນ້າພວກເຂົາ
ສິ່ງເຫລົ່ານີ້ເປັນສິ່ງທີ່ດີແລະມີປະໂຫຍດຕໍ່ທຸກໆຄົນ.
9ແຕ່ຈົ່ງຫລີກຫນີການໂຕ້ຖຽງອັນໂງ່ງ່າວ, ເລື່ອງລຳດັບວົງຕະກູນ, ການຜິດຖຽງກັນ ແລະ ການຂັດແຍ້ງໃນເລື່ອງກົດບັນຍັດ, ເພາະສິ່ງເຫລົ່ານັ້ນ
ໄຮ້ປະໂຫຍດ ແລະ ບໍ່ມີຄຸນຄ່າຫຍັງ.10ຈົ່ງປະຕິເສດຜູ້ທີ່ກໍ່ໃຫ້ເກີດການແຕກແຍກກັນ, ເມື່ອໄດ້ເຕືອນເຂົາຄັ້ງຫນຶ່ງ ຫລືສອງຄັ້ງແລ້ວ.
11ເພາະຮູ້ແລ້ວວ່າຄົນນັ້ນໄດ້ຫັນອອກຈາກທາງທີ່ຖືກຫລົງໄປເຮັດຜິດບາບແລ້ວກໍກ່າວໂທດໃສ່ຕົວຂອງເຂົາເອງ.
12ເມື່ອຂ້າພຣະເຈົ້າສົ່ງ ອາເຕມາ ຫລື ຕີຂີໂກ ໄປ ຫາເຈົ້ານັ້ນ, ຈົ່ງຟ້າວແລະມາຫາຂ້າພຣະເຈົ້າທີ່ເມືອງ ນີໂກໂປລີ,
ທີ່ຊຶ່ງຂ້າພຣະເຈົ້າໄດ້ຕັດສິນໃຈຈະຢູ່ໃນຊ່ວງຣະດູຫນາວ.13ຈົ່ງຟ້າວຟັງ ແລະຊ່ວຍສົ່ງເຊນັດ, ຜູ້ເປັນທະນາຍຄວາມ ແລະ ອາໂປໂລ,
ໃຫ້ເລີ່ມອອກ ເດີນທາງແລະພ້ອມດ້ວຍທຸກສິ່ງທີ່ຈຳເປັນ.
14ພີ່ນ້ອງຂອງພວກເຮົາ ຕ້ອງຮຽນຮູ້ທີ່ຈະມີສ່ວນໃນການເຮັດການດີ ທີ່ຕອບສະຫນອງຕໍ່ຄວາມຈຳເປັນເລັ່ງດ່ວນ ເພື່ອພວກເຂົາຈະບໍ່ເປັນຄົນທີ່
ບໍ່ເກີດຜົນ.
15ທຸກຄົນທີ່ຢູ່ນຳເຮົາ ຕ່າງກໍຝາກຄຳທັກທາຍເຖິງທ່ານຝາກທັກທາຍບັນດາພີ່ນ້ອງທີ່ຮັກຂອງພວກເຮົາໃນຄວາມເຊື່ອອັນດຽວກັນ.
ຂໍພຣະຄຸນຢູ່ກັບພວກທ່ານທຸກໆຄົນເຖີ້ນ.

# ຟີເລໂມນ

1 1ໂປໂລ, ຜູ້ຖືກຄຸກຢູ່ເພື່ອເຫັນແກ່ພຣະເຢຊູຄຣິດເຈົ້າ, ແລະ ຈາກຕີໂມທຽວ ນ້ອງຊາຍຂອງພວກເຮົາ, ເຖິງຟີເລໂມນ ເພື່ອນ
ຮ່ວມງານທີ່ຮັກຂອງພວກເຮົາ,2ແລະ ເຖິງອັບເຟັຽ ນ້ອງສາວຂອງພວກເຮົາ, ແລະ ອາຂີໂປ ຜູ້ເປັນເພື່ອນທະຫານຂອງພວກເຮົາ, ແລະ
ເຖິງຄຣິສຕະຈັກ ທີ່ຢູ່ໃນເຮືອນຂອງເຈົ້າ.3ຂໍພຣະຄຸນ ແລະ ສັນຕິສຸກ ຈາກພຣະເຈົ້າພຣະບິດາເຈົ້າຂອງພວກເຮົາ ແລະ ອົງພຣະເຢຊູຄຣິດເຈົ້າ
ຊົງໂຜດປະທານແກ່ພວກເຈົ້າເທີ້ນ.

4ຂ້າພະເຈົ້າໂມທະນາ ຂອບພຣະຄຸນພຣະເຈົ້າຂອງເຮົາຢູ່ສະເຫມີ. ຂ້າພຣະເຈົ້າກໍຣະນຶກເຖິງເຈົ້າ ໃນທຸກເທື່ອທີ່ເຮົາພາວັນນາອະທິຖານ.
5ເຮົາໄດ້ຍິນຂ່າວເລື່ອງຄວາມຮັກ ແລະ ຄວາມເຊື່ອຂອງເຈົ້າ ທີ່ເຈົ້າມີຕໍ່ອົງພຣະເຢຊູເຈົ້າ ແລະ ຕໍ່ບັນດາຜູ້ທີ່ເຊື່ອທັງປວງ.
6ເຮົາໄດ້ພາວັນນາອະທິຖານ ຂໍໃຫ້ການເຂົ້າສ່ວນໃນຄວາມເຊື່ອຂອງເຈົ້ານັ້ນ ຈົ່ງໄດ້ເກີດຜົນຄືເພີ່ມພູນ ໃນຄວາມຮູ້ໃນການດີທຸກຢ່າງ
ທີ່ພວກເຮົາມີໃນອົງພຣະຄຣິດເຈົ້າ.7ສຳລັບເຮົາມີຄວາມຍິນດີຫລາຍ ແລະ ໄດ້ຮັບຄວາມຫນູນໃຈ ເພາະຄວາມຮັກຂອງເຈົ້າ,
ເພາະຫົວໃຈຂອງຜູ້ທີ່ເຊື່ອໃນພຣະເຈົ້າ ກໍໄດ້ຮັບ ຄວາມສົດຊື່ນຂຶ້ນເພາະເຈົ້າ, ນ້ອງເອີຍ.
8ເພາະສະນັ້ນ, ເຖິງແມ່ນວ່າ ເຮົາມີໃຈກ້າໃນພຣະຄຣິດເຈົ້າ ທີ່ຈະສັ່ງເຈົ້າໃຫ້ເຮັດໃນສິ່ງທີ່ເຈົ້າສົມຄວນເຮັດ.9ແຕ່ຍ້ອນຄວາມຮັກ, ເຮົາ
ຈຶ່ງຂໍຮ້ອງເຈົ້າດີກວ່າ - ເຮົາ, ໂປໂລ, ຄົນເຖົ້າຜູ້ຫນຶ່ງ, ແລະ ໃນປະຈຸບັນນີ້ແມ່ນຖືກຄຸກຢູ່ ກໍເພາະເຫັນແກ່ພຣະເຢຊູຄຣິດເຈົ້າ.
10ດັ່ງນັ້ນເຮົາຈຶ່ງຂໍຮ້ອງເຈົ້າເພື່ອໂອເນຊີໂມ, ຜູ້ທີ່ເປັນລູກຂອງເຮົາໃນພຣະຄຣິດ, ຊຶ່ງເຮົາກໍໄດ້ກາຍເປັນພໍ່ຂອງລາວໃນຝ່າຍຄວາມເຊື່ອ.
11ເມື່ອກ່ອນລາວບໍ່ເປັນປະໂຫຍດແກ່ເຈົ້າ, ແຕ່ບັດນີ້ລາວເປັນປະໂຫຍດແກ່ທັງເຈົ້າ ແລະ ເຮົາເຫມືອນກັນ.12ເຮົາໄດ້ໃຊ້ລາວຄືນມາຫາເຈົ້າ,
ລາວຜູ້ນີ້ເປັນຫມາກຫົວໃຈຂອງເຮົາ.13ເຮົາ ຢາກໃຫ້ລາວຢູ່ກັບເຮົາ, ເພື່ອວ່າລາວຈະໄດ້ບົວລະບັດຮັບໃຊ້ເຮົາແທນເຈົ້າ, ໃນຂະນະທີ່ ເຮົາ
ຖືກກັງຂັງຢູ່ເພື່ອເຫັນແກ່ຂ່າວປະເສີດນັ້ນ.
14ແຕ່ວ່າເຮົາບໍ່ຢາກເຮັດສິ່ງໃດກ່ອນທັງນັ້ນ ຫາກບໍ່ໄດ້ຮັບຄວາມເຫັນຈາກເຈົ້າ.
ເຮົາບໍ່ຕ້ອງການຄຸນຄວາມດີທີ່ເຈົ້າເຮັດນັ້ນຈາກຄວາມຂົ່ມໃຈຈຳເປັນ ແຕ່ໃຫ້ອອກຈາກຄວາມສະຫມັກໃຈຂອງເຈົ້າດ້ວຍ.15ບາງທີໂອເນຊີໂມໄດ້
ຈາກເຈົ້າໄປຊົ່ວໄລຍະຫນຶ່ງ, ເພື່ອວ່າເຈົ້າຈະໄດ້ຮັບ ລາວກັບຄືນມາຕະຫລອດໄປ.16ບັດນີ້ລາວ ບໍ່ແມ່ນເປັນພຽງຂ້າຮັບໃຊ້ຄົນຫນຶ່ງເທົ່ານັ້ນ,
ແຕ່ດີກວ່າຂ້າຮັບໃຊ້ອີກຄື, ເປັນອ້າຍນ້ອງທີ່ຮັກຄົນ ຫນຶ່ງ. ລາວເປັນທີ່ຮັກເປັນພິເສດແກ່ເຮົາ ແລະ ກໍຄົງ ເປັນທີ່ຮັກແກ່ເຈົ້າຫລາຍກວ່າ ອີກທັງໃນ
ຖານະທີ່ເປັນເພື່ອນມະນຸດ ແລະ ໃນຖານະທີ່ເປັນ ພີ່ນ້ອງກັນໃນອົງພຣະຜູ້ເປັນເຈົ້າດ້ວຍ.
17ເຫດສະນັ້ນ ຖ້າເຈົ້າຖືວ່າເຮົາເປັນເພື່ອນ ຮ່ວມງານຂອງເຈົ້າແລ້ວ, ຈົ່ງຕ້ອນຮັບລາວໄວ້ ເຫມືອນກັບເຈົ້າຕ້ອນຮັບເຮົາ.18ຖ້າລາວໄດ້
ເຮັດຜິດພາດປະການໃດ ຫລື ເປັນຫນີ້ຫຍັງແດ່ ກໍ ໃຫ້ເຈົ້າຄິດເອົານຳເຮົາ.19ຝ່າຍເຮົາ, ໂປໂລ, ລົງມືຂຽນສິ່ງນີ້ດ້ວຍຕົວເອງ:

 generated on Tue Jun 17 19:01:42 2025

ເຮົາຈະໃຊ້ແທນຄືນເຈົ້າ. ເຮົາຈະບໍ່ອ້າງເຖິງແກ່ເຈົ້າວ່າ ເຈົ້າເປັນຫນີ້ເຮົາ ດ້ວຍຊີວິດຂອງເຈົ້າເອງ.”[20]ດັ່ງນັ້ນ, ນ້ອງເອີຍ,
ຂໍໃຫ້ເຮົາໄດ້ຮັບປະໂຫຍດຈາກເຈົ້າໃນອົງພຣະຜູ້ເປັນເຈົ້າ; ຈົ່ງເຮັດໃຫ້ຈິດໃຈຂອງເຮົາສົດຊື່ນຂຶ້ນໃນພຣະຄຣິດເຈົ້າ.
[21]ເຮົາມີຄວາມຫມັ້ນໃຈໃນຄວາມເຊື່ອຟັງຂອງເຈົ້າ, ເຮົາຈຶ່ງຂຽນຈົດຫມາຍມາເຖິງເຈົ້າ. ເຮົາຮູ້ວ່າເຈົ້າ ຈະເຮັດໄດ້ ຫລາຍກວ່າທີ່ເຮົາຂໍອີກ.
[22]ໃນເວລາດຽວກັນ, ຈົ່ງຈັດຕຽມຫ້ອງພັກໄວ້ ສຳລັບເຮົາ, ເພາະເຮົາຫວັງວ່າຜ່ານຄຳພາວັນນາອະທິຖານ ຂອງພວກເຈົ້າ
ເຮົາຈະໄດ້ກັບມາຫາເຈົ້າ.
[23]ເອປາຟາ, ຜູ້ຖືກຄຸກຮ່ວມກັບເຮົາ ເພາະ ເຫັນແກ່ພຣະເຢຊູຄຣິດເຈົ້າ, ກໍຝາກຄວາມຄິດເຖິງ ມາຫາເຈົ້າ.[24]ເຊັ່ນດຽວກັນກັບ ມາຣະໂກ,
ອາຣິດຕາໂຂ, ເດມາ ແລະ ລູກາ, ເພື່ອນຮ່ວມ ງານຂອງເຮົາກໍຝາກຄວາມຄິດເຖິງມາດ້ວຍ.[25]ຂໍໃຫ້ພຣະຄຸນ ຂອງອົງພຣະເຢຊູຄຣິດເຈົ້າ
ພຣະເຈົ້າຂອງພວກເຮົາ ຈົ່ງສະຖິດຢູ່ກັບຈິດ ວິນຍານຂອງພວກເຈົ້າ. ອາແມນ.

# ເຮັບເຣີ

1 [1]ເປັນເວລານານມາແລ້ວທີ່ ພຣະເຈົ້າຊົງກ່າວ ແກ່ບັນພະບຸຣຸດຂອງພວກເຮົາຜ່ານທາງຜູ້ປະກາດພຣະທັມໃນຫລາຍຄັ້ງ ແລະ
ດ້ວຍຫລາຍວິທີຕ່າງໆ.[2]ແຕ່ໃນຍຸກສຸດທ້າຍນີ້, ພຣະອົງ ໄດ້ຊົງກ່າວກັບພວກເຮົາຜ່ານທາງພຣະບຸດ,
ຜູ້ທີ່ພຣະອົງແຕ່ງຕັ້ງໃຫ້ເປັນທາຍາດຜູ້ຮັບສັບພະທຸກສິ່ງທັງປວງໂດຍຜ່ານທາງພຣະອົງ ພຣະເຈົ້າໄດ້ຊົງສ້າງໂລກຈັກກະວານ.
[3]ພຣະບຸດນັ້ນເປັນແສງສະຫວ່າງ ອັນເຈີດຈ້າແຫ່ງພຣະສະຫງ່າຣາສີຂອງພຣະເຈົ້າ, ເປັນຜູ້ສະທ້ອນເຖິງພຣະລັກສະນະທີ່ແທ້ຈິງຂອງພຣະອົງ.
ພຣະອົງຍຶດທຸກສິ່ງເຂົ້າໄວ້ ດ້ວຍກັນໂດຍຖ້ອຍຄຳອັນຊົງຣິດອຳນາດຂອງພຣະອົງ. ຫລັງຈາກທີ່ພຣະອົງໄດ້ຊຳຣະບາບກັມແລ້ວ,
ພຣະອົງກໍຊົງປຣະທັບຢູ່ເບື້ອງຂວາພຣະຫັດ ຂອງພຣະເຈົ້າຜູ້ຊົງຣິດທານຸພາບໃນທີ່ສູງສຸດ.

[4]ພຣະອົງໄດ້ເກີດມາເປັນຜູ້ປະເສີດກວ່າບັນດາທູດສະຫວັນ, ເພາະພຣະນາມຂອງພຣະອົງ
ທີ່ໄດ້ຮັບມາເປັນພຣະນາມທີ່ປະເສີດເລີດລ້ຳກວ່ານາມທັງປວງຂອງພວກເຂົາ.[5]ເພາະມີທູດສະຫວັນອົງໃດບໍ
ທີ່ພຣະເຈົ້າເຄີຍກ່າວກັບເຂົາວ່າ,“ທ່ານເປັນບຸດຂອງເຮົາ, ວັນນີ້ ເຮົາເປັນບິດາຂອງພວກທ່ານ.” ແລະ ກ່າວອີກວ່າ, “ເຮົາຈະເປັນບິດາຂອງເຂົາ,
ແລະ ເຂົາກໍຈະເປັນບຸດຂອງເຮົາ.”
[6]ອີກຄັ້ງຫນຶ່ງ, ເມື່ອ ພຣະເຈົ້າໄດ້ສົ່ງພຣະບຸດກົກ ເຂົ້າມາໃນໂລກນັ້ນ, ພຣະອົງໄດ້
ຊົງກ່າວວ່າ,“ທູດສະຫວັນທັງຫມົດຂອງພຣະເຈົ້າຕ້ອງນ້ອມນະມັດສະການພຣະອົງ.”[7]ພຣະອົງກ່າວກ່ຽວກັບບັນດາເທວະດາວ່າ,
“ພຣະເຈົ້າບັນດານໃຫ້ຝູງເທວະດາ ຂອງພຣະອົງເປັນວິນຍານ ແລະເຮັດໃຫ້ບັນດາຜູ້ຮັບເປັນແປວໄຟອັນຮ້ອນກ້າ.”
[8]ແຕ່ກ່ຽວກັບພຣະບຸດນັ້ນ ພຣະອົງກ່າວວ່າ,“ພຣະເຈົ້າ, ພຣະຣາຊະບັນລັງ ຂອງພຣະອົງ ຕັ້ງຫມັ້ນຄົງຢູ່ເປັນນິດ.
ພຣະອົງຈະຊົງປົກຄອງຣາຊະອານາຈັກ ດ້ວຍຄວາມຍຸດຕິທັມ.[9]ພຣະອົງຊົງຮັກຄວາມຊອບທັມ ແລະ ຊົງກຽດຊັງສິ່ງອະທັມ. ດ້ວຍເຫດນີ້
ພຣະເຈົ້າ, ຜູ້ເປັນພຣະເຈົ້າຂອງທ່ານ, ໄດ້ຊົງຫົດສົງທ່ານ ໄວ້ດ້ວຍນ້ຳມັນແຫ່ງຄວາມຍິນດີຫລາຍກວ່າບັນດາສະຫາຍຂອງທ່ານ”
[10]ອົງພຣະຜູ້ເປັນເຈົ້າ, ໃນແຕ່ຕົ້ນ, ພຣະອົງໄດ້ວາງຮາກຖານຂອງແຜ່ນດິນໂລກ. ຟ້າສະຫວັນເປັນຜົນງານແຫ່ງສີພຣະຫັດຂອງພຣະອົງ.
[11]ພວກເຂົານັ້ນຈະດັບສູນໄປ, ແຕ່ພຣະອົງຈະຍັງຄົງຢູ່. ສິ່ງເຫລົ່ານັ້ນຈະເກົ່າໄປເຫມືອນກັບເຄື່ອງນຸ່ງຫົ່ມຜືນຫນຶ່ງ.
[12]ພຣະອົງຈະມ້ວນພວກມັນເຫມືອນ ກັບມ້ວນເສື້ອໃຫຍ່ ແລະ ພວກມັນ ຈະຖືກເຮັດໃຫ້ປ່ຽນໄປເປັນເຫມືອນກັບຜ້າຜືນຫນຶ່ງ.
ແຕ່ພຣະອົງຊົງເປັນເຫມືອນເດີມ ແລະ ປີທັງຫລາຍຂອງພຣະອົງ ກໍບໍ່ສິ້ນສຸດຈັກເທື່ອ.”
[13]ແຕ່ພຣະອົງ ເຄີຍກ່າວກັບ ທູດສະຫວັນ ຕົນໃດວ່າ,“ຈົ່ງນັ່ງຢູ່ທີ່ເບື້ອງຂວາມື ຂອງເຮົາຈົນກວ່າ
ເຮົາເຮັດໃຫ້ສັດຕູທັງຫລາຍຂອງທ່ານໃຫ້ຂາບລົງຢູ່ໃຕ້ພື້ນຕີນຂອງທ່ານ.”[14]ເທວະດາທັງຫມົດ ບໍ່ແມ່ນວິນຍານ
ຜູ້ຮັບໃຊ້ທີ່ພຣະເຈົ້າໃຊ້ມາເພື່ອດູແລຄົນເຫລົ່ານັ້ນທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍຣະດົກບໍ?

2 [1]ດ້ວຍເຫດນີ້ພວກເຮົາຈຶ່ງຕ້ອງໃຫ້ເອົາໃຈ ໃສ່ຫລາຍຍິ່ງຂຶ້ນຕໍ່ສິ່ງທີ່ພວກເຮົາໄດ້ຍິນເພື່ອວ່າພວກເຮົາ ຈະບໍ່ຕະເຫລີດອອກໄປຈາກສິ່ງເຫລົ່ານີ້.

[2]ດ້ວຍວ່າ, ຖ້ອຍຄຳທີ່ຖືກກ່າວໂດຍຜ່ານທາງບັນດາເທວະດານັ້ນມີເຫດຜົນແລະ
ການລະເມີດກັບການບໍ່ເຊື່ອຟັງທຸກຢ່າງຕາມຍັງໄດ້ຮັບການລົງໂທດຢ່າງເປັນທັມ.[3]ແລ້ວ ພວກເຮົາຈະຫລົບຫນີພົ້ນໄດ້ແນວໃດ
ຖ້າພວກເຮົາລະເລີຍ ຕໍ່ຄວາມພົ້ນອັນຍິ່ງໃຫ່ຍນີ້? ນີ້ຄືຄວາມພົ້ນທີ່ໄດ້ຮັບການປະກາດ ໃນເວລາທຳອິດ ໂດຍອົງພຣະຜູ້ເປັນເຈົ້າ ແລະ
ພວກເຮົາໄດ້ຮັບການຢືນຢັນ ໂດຍບັນດາຄົນເຫຼົ່ານັ້ນທີ່ໄດ້ຍິນເລື່ອງນີ້.[4]ໃນເວລາດຽວກັນ ພຣະເຈົ້າໄດ້ເປັນພະຍານ ໂດຍຫມາຍສຳຄັນ,
ການອັດສະຈັນ,
ການອິດທິຣິດອັນປະກອບໄປດ້ວຍຣິດອຳນາດຫລວງຫລາຍແລະໂດຍໃຫ້ຂອງປຣະທານຂອງພຣະວິນຍານບໍຣິສຸດເຈົ້າຕາມນ້ຳພຣະທັຍຂອງພຣະອົງ.
[5]ຄືໂລກທີ່ເຮົາກຳລັງກ່າວເຖິງນັ້ນ.[6]ແຕ່ມີຄົນຫນຶ່ງກ່າວ ຢືນຢັນເອົາໄວ້ໂດຍກ່າວວ່າ,“ມະນຸດສຳຄັນຫຍັງນໍທີ່ ພຣະອົງຈະຕ້ອງຄິດເຖິງເຂົາ?
ຫລືບຸດມະນຸດເປັນໃຜ, ທີ່ພຣະອົງຊົງເປັນຫ່ວງເປັນໃຍເຂົາ?
[7]ພຣະອົງສ້າງມະນຸດໃຫ້ຕ່ຳ ກວ່າບັນດາເທວະດາ ພຽງຫນ້ອຍຫນຶ່ງ; ພຣະອົງສວມມົງກຸດແຫ່ງສະຫງ່າຣາສີ ແລະ ກຽດຕິຍົດໃຫ້ແກ່ເຂົາ.
[8]ພຣະອົງວາງທຸກສິ່ງໃຫ້ຢູ່ພາຍໃຕ້ຕີນແຫ່ງການປົກຄອງຂອງເຂົາ.” ເພາະມະນຸດຄືຜູ້ທີ່ ພຣະເຈົ້າຊົງໃຫ້ທຸກສິ່ງ
ຢູ່ໃຕ້ການປົກຄອງຂອງພວກເຂົານັ້ນ. ພຣະອົງບໍ່ໄດ້ໃຫ້ມີຈັກສິ່ງດຽວທີ່ບໍ່ຢູ່ພາຍໃຕ້ການປົກຄອງຂອງພວກເຂົາ. ແຕ່ບັດນີ້ເຮົາຍັງບໍ່ເຫັນວ່າທຸກ
ສິ່ງທີ່ຢູ່ພາຍໃຕ້ເຂົາ.
[9]ແຕ່ພວກເຮົາ ເຫັນຜູ້ທີ່ຖືກເຮັດໃຫ້ຕ່ຳ ກວ່າບັນດາເທວະດາ ພຽງຊົ່ວຄາວນັ້ນ
ຄືພຣະເຢຊູເຈົ້າຜູ້ທີ່ໂດຍການທົນທຸກແລະການຕາຍຂອງພຣະອົງເຮັດໃຫ້ພຣະອົງໄດ້ຮັບພຣະສະຫງ່າຣາສີ ແລະ ພຣະກຽດສວມ ເປັນມົງກຸດ
ດັ່ງນັ້ນໃນເວລານີ້ໂດຍພຣະຄຸນຂອງພຣະເຈົ້າ ພຣະອົງຈຶ່ງໄດ້ຊີມ ຣົດຄວາມຕາຍ ແທນມະນຸດທຸກຄົນ.
[10]ເພາະນີ້ເປັນການເຫມາະສົມສຳລັບພຣະເຈົ້າ ທີ່ຈະພາບັນດາບຸດຫລວງຫລາຍ ໄປສູ່ສະຫງ່າຣາສີ ເນື່ອງຈາກທຸກສິ່ງດຳຣົງຢູ່ເພື່ອພຣະອົງແລະ
ໂດຍຜ່ານທາງພຣະອົງ ເປັນການເຫມາະສົມສຳລັບພຣະອົງ ແລ້ວທີ່ຈະຊົງໃຫ້ການເປັນຜູ້ນຳທາງ ແຫ່ງຄວາມລອດພົ້ນ
ທີ່ມີໄວ້ສຳລັບພວກເຂົາສຳເລັດ ໂດຍຜ່ານທາງການທົນທຸກຂອງພຣະອົງ.
[11]ເພາະທັງຜູ້ຫນຶ່ງທີ່ຍອມອຸທິດຊີວິດກັບບັນດາຄົນເຫລົ່ານັ້ນທີ່ໄດ້ຮັບການອຸທິດມອບໄວ້ລ້ວນມາຈາກແຫລ່ງກຳເນີດດຽວກັນ
ດ້ວຍເຫດຜົນນີ້ເອງພຣະເຢຊູຄຣິດເຈົ້າ ຈຶ່ງບໍ່ລະອາຍທີ່ຈະເອີ້ນຄົນເຫຼົ່ານັ້ນວ່າ ເປັນພີ່ນ້ອງ[12]ພຣະອົງກ່າວວ່າ, “ເຮົາ ຈະ ປະກາດເຖິງ
ພຣະນາມຂອງພຣະອົງ ແກ່ພີ່ນ້ອງຂອງເຮົາ, ເຮົາຈະຮ້ອງເພງສັນຣະເສີນ ພຣະອົງຈາກພາຍໃນທີ່ຊຸມຊົນ.”
[13]ພຣະອົງກ່າວວ່າ, “ຂ້າພຣະອົງຈະມອບຄວາມໄວ້ວາງໃຈໃນພຣະເຈົ້າ ແລະ ພຣະອົງຍັງກ່າວອີກວ່າ, ເບິ່ງແມ ຂ້າພຣະອົງຢູ່ທີ່ນີ້
ກັບບຸດທັງຫລາຍ ທີ່ພຣະອົງ ຊົງມອບໃຫ້ຂ້າພຣະອົງ.”[14]ດ້ວຍ ເຫດນີ້,
ບັນດາບຸດຂອງພຣະເຈົ້າໄດ້ເຂົ້າສ່ວນໃນເນື້ອຫນັງແລະເລືອດກັບພວກເຂົາດ້ວຍເພື່ອວ່າໂດຍທາງ ຄວາມຕາຍຂອງພຣະອົງ ພຣະອົງຈະທຳລາຍ
ຜູ້ນັ້ນທີ່ມີອຳນາດແຫ່ງຄວາມຕາຍ, ຄືມານຮ້າຍ.
[15]ໂດຍທາງນີ້ພຣະອົງຈະປົດປ່ອຍບັນດາຄົນເຫລົ່ານັ້ນທີ່ມີຊີວິດຕົກເປັນທາດຂອງຄວາມຢ້ານຕາຍຂອງພວກເຂົາໃຫ້ເປັນອິສຣະ.
[16]ເພາະເຫດນີ້ຈຶ່ງຈະແຈ້ງວ່າ ບໍ່ແມ່ນບັນດາທູດສະຫວັນ ທີ່ພຣະເຈົ້າຊົງເປັນຫ່ວງແຕ່ຄືເຊື້ອສາຍ ຂອງອັບຣາຮາມທີ່ພຣະອົງຊົງເປັນຫ່ວງ.
[17]ດັ່ງນັ້ນຈຶ່ງຈຳເປັນຢ່າງຍິ່ງທີ່ ພຣະອົງຈະຕ້ອງເປັນເຫມືອນພີ່ນ້ອງຂອງພຣະອົງທຸກຢ່າງ, ເພື່ອວ່າພຣະອົງ
ຈະສາມາດເປັນມະຫາປະໂລຫິດທີ່ສັດຊື່ ແລະ ມີໃຈເມດຕາຕໍ່ສິ່ງຕ່າງໆຂອງພຣະເຈົ້າ,
ແລະເພື່ອພຣະອົງຈະນຳການຍົກໂທດຄວາມບາບມາຍັງຜູ້ຄົນ.[18]ເພາະວ່າ ພຣະເຢຊູຄຣິດເຈົ້າເອງໄດ້ທົນທຸກແລະຖືກທົດລອງມາກ່ອນ
ພຣະອົງຈຶ່ງຊົງສາມາດຊ່ວຍ ຄົນເຫລົ່ານັ້ນທີ່ຖືກທົດລອງນັ້ນໄດ້.


generated on Tue Jun 17 19:01:42 2025

3 [1]ເພາະສະນັ້ນ, ພີ່ນ້ອງຜູ້ບໍລິສຸດ ພວກທ່ານຜູ້ເຂົ້າສ່ວນໃນການຊົງເອີ້ນຈາກສະຫວັນຂໍ ຈົ່ງຄິດເຖິງພຣະເຢຊູເຈົ້າຜູ້ຊົງເປັນອັຄະຣະທູດແລະ
ມະຫາ ປະໂລຫິດທີ່ເຮົາຍອມຮັບນັ້ນ.[2]ພຣະອົງ ສັດຊື່ ຕໍ່ພຣະເຈົ້າຜູ້ຊົງແຕ່ງຕັ້ງ ພຣະອົງເຫມືອນດັ່ງທີ່ໂມເຊສັດຊື່ ໃນ ບ້ານຂອງພຣະເຈົ້າ.
[3]ເພາະພຣະເຢຊູຄຣິດເຈົ້າ ໄດ້ຮັບການພິຈາຣະນາວ່າຊົງສົມຄວນຕໍ່ພຣະ ສະຫງ່າຣາສີ ອັນຍິ່ງໃຫຍ່ກວ່າໂມເຊ,
ເພາະຜູ້ທີ່ສ້າງບ້ານຍອມມີກຽດຫລາຍກວ່າຕົວບ້ານ.[4]ບ້ານທຸກຫລັງຈະຕ້ອງມີຄົນທີ່ສ້າງບ້ານນັ້ນແຕ່ພຣະເຈົ້າຄືຜູ້ສ້າງສັບພະສິ່ງທັງປວງ.

[5]ໃນທາງຫນຶ່ງໂມເຊເປັນຄົນທີ່ສັດຊື່ໃນຖານະເປັນຄົນຮັບໃຊ້
ທີ່ຢູ່ໃນບ້ານຂອງພຣະເຈົ້າເຂົາເປັນພະຍານກຽວກັບສິ່ງຕ່າງໆທີ່ຈະເກີດຂຶ້ນໃນອານາຄົດ ຊຶ່ງໄດ້ຮັບການກ່າວເຖິງ.
[6]ແຕ່ຝ່າຍພຣະຄຣິດຊົງເປັນພຣະບຸດຜູ້ມີອຳນາດໃນບ້ານຂອງພຣະເຈົ້າ ແລະ ເຮົາ ທັງຫລາຍ ກໍເປັນບ້ານຂອງພຣະອົງ ຖ້າເຮົາຫາກຍຶດໝັ້ນ
ໃນຄວາມກ້າຫານ ແລະໃນຄວາມຫມັ້ນໃຈ ໃນຄວາມຫວັງຂອງພວກເຮົາ
[7]ດັ່ງນັ້ນ, ຈຶ່ງເຫມືອນກັບທີ່ພຣະວິນຍານບໍຣິສຸດເຈົ້າ ຊົງກ່າວໄວ້ວ່າ,“ວັນນີ້ ຖ້າຫາກພວກເຈົ້າ
ໄດ້ຍິນພຣະສຸຣະສຽງຂອງພຣະອົງ[8]ຢ່າເຮັດໃຫ້ໃຈແຂງກະດ້າງເຫມືອນກັບຄົນທີ່ກະບົດໃນຊ່ວງເວລາແຫ່ງການທົດສອບ
ໃນຖິ່ນແຫ້ງແລ້ງກັນດານ.
[9]ນີ້ຄືເມື່ອພວກບັນພະບຸຣຸດຂອງພວກເຈົ້າໄດ້ກະບົດດ້ວຍການທົດລອງພິສູດເຮົາ, ຄືຊ່ວງ,
ຕະຫລອດສີ່ສິບປີທີ່ພວກເຂົາເຫັນການກະທຳຂອງເຮົາ[10]ດ້ວຍເຫດນີ້, ເຮົາຈຶ່ງໂກດຮ້າຍກັບຄົນໃນຮຸ່ນນັ້ນ
ເຮົາເວົ້າວ່າ,‘ພວກເຂົາຖືກຊັກຈູງໃຫ້ຫລົງຜິດໃນຫົວໃກຂອງພວກເຂົາຢູ່ສະເຫມີ
ພວກເຂົາບໍ່ຮູ້ຈັກຫົນທາງຂອງເຮົາ.’[11]ຈຶ່ງເປັນໄປຕາມທີ່ເຮົາໄດ້ປະຕິຍານດ້ວຍຄວາມໂກດຮ້າຍໄວ້ວ່າ, ພວກເຂົາ
ຈະບໍ່ມີວັນໄດ້ເຂົ້າບ່ອນທີ່ເຮົາຈະໃຫ້ພວກເຂົາໄດ້ພັກຜ່ອນ.”
[12]ຈົ່ງ ຣະວັງໃຫ້ດີ ພີ່ນ້ອງເອີຍ ເພື່ອວ່າໃນທ່າມກາງພວກທ່ານຈະບໍ່ມີຜູ້ໃດທີ່ມີຈິດໃຈຊົ່ວຊ້າເນື່ອງຈາກການບໍ່ເຊື່ອຟັງ,
ຄືຫົວໃຈທີ່ຫັນອອກຈາກພຣະເຈົ້າອົງຊົງພຣະຊົນຢູ່.[13]ແຕ່ຈົ່ງຫນູນໃຈກັນແລະກັນທຸກໆວັນ ຕາບໃດທີ່ຍັງໃຊ້ຄຳວ່າ, “ວັນນີ້”
ເພື່ອໃນທ່າມກາງພວກເຈົ້າຈະບໍ່ມີແມ່ນແຕ່ຄົນດຽວທີ່ຖືກເຮັດ ໃຫ້ໃຈດື້ດ້ານໂດຍການຫລອກລວງຂອງຄວາມບາບ.
[14]ເພາະ, ພວກເຮົາໄດ້ມາ ເປັນຜູ້ຮ່ວມງານກັບພຣະຄຣິດ
ຖ້າພວກເຮົາຍຶດຫມັ້ນຢ່າງເຕັມທີ່ໃນຄວາມຫວັງໃຈທີ່ມີໃນພຣະອົງຕັ້ງແຕ່ຕອນຕົ້ນຈົນເຖິງວັນສຸດທ້າຍ[15]ດັ່ງທີ່ມີກ່າວໄວ້ແລ້ວວ່າ ວັນນີ້
ຖ້າພວກເຈົ້າໄດ້ຍິນ ພຣະສຸຣະສຽງ ຂອງພຣະອົງກໍຢ່າເຮັດໃຫ້ໃຈຂອງພວກເຈົ້າແຂງກະດ້າງ ໄປເຫມືອນຄົນກະບົດ.”
[16]ຜູ້ໃດຄືຄົນທີ່ໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າ ແລະຍັງກະບົດ ບໍ່ແມ່ນພວກຄົນເຫລົ່ານັ້ນທີ່ອອກມາຈາກປະເທດອີຢິບ ໂດຍຜ່ານທາງໂມເຊບໍ?
[17]ຜູ້ໃດຄືຄົນທີ່ເຮັດໃຫ້ພຣະເຈົ້າໂກດຮ້າຍຕະຫລອດສີ່ສິບປີ? ບໍ່ແມ່ນຄົນເຫຼົ່ານັ້ນທີ່ເຮັດຜິດບາບພວກເຂົາ
ທີ່ລົ້ມຕາຍໃນຖິ່ນແຫ້ງແລ້ງກັນດານນັ້ນຫລື?[18]ຜູ້ໃດຄືຄົນທີ່ ພຣະອົງ ໄດ້ຊົງສາບານຕົວວ່າ ພວກເຂົາຈະບໍ່ໄດ້ເຂົ້າຮ່ວມບ່ອນພັກເຊົາຂອງພຣະອົງ,
ກໍຄືຄົນເຫລົ່ານັ້ນທີ່ບໍ່ເຊື່ອຟັງພຣະອົງບໍ່ແມ່ນບໍ?[19]ແລະເຮົາເຫັນວ່າ ພວກເຂົາບໍ່ສາມາດເຂົ້າສູ່ການຢຸດພັກຂອງພຣະອົງເພາະການບໍ່ເຊື່ອຟັງ.

4 [1]ດັ່ງນັ້ນ, ຂໍໃຫ້ພວກເຮົາ ຣະວັງໃຫ້ດີເພື່ອຈະບໍ່ມີໃຜໃນພວກທ່ານທີ່ຫລົ້ມເຫລວໃນການເຂົ້າເຖິງພຣະສັນຍາທີ່ມີໄວ້ສຳລັບພວກທ່ານ
ໃນການເຂົ້າສູ່ການພັກສະຫງົບຂອງພຣະເຈົ້າ.[2]ເພາະວ່າ ພວກເຮົາໄດ້ຍິນເຖິງຂ່າວປະເສີດເຫມືອນກັບທີ່ພວກເຂົາໄດ້ຮັບ
ແຕ່ຂໍ້ຄວາມນັ້ນບໍ່ໄດ້ເກີດປະໂຫຍດຕໍ່ຄົນເຫລົ່ານັ້ນທີ່ ບໍ່ໄດ້ເຂົ້າສ່ວນກັບຄົນເຫລົ່ານັ້ນທີ່ເຊື່ອຟັງ.

[3]ເພາະ ພວກເຮົາທີ່ເຊື່ອກໍເປັນຄົນເຫລົ່ານັ້ນ ທີ່ຈະໄດ້ເຂົ້າສູ່ການ ພັກຜ່ອນເຫມືອນຢ່າງທີ່, ພຣະອົງກ່າວເອົາໄວ້ວ່າ,
ເຫມືອນທີ່ເຮົາຊົງສັນຍາເອົາໄວ້, "ດ້ວຍ ຄວາມເຄືອງໃຈ ຂອງເຮົາ ພວກເຂົາຈະບໍ່ໄດ້ເຂົ້າ ສູ່ການພັກສະຫງົບຂອງເຮົາເລີຍ."ເຖິງແມ່ນວ່າ,
ການງານແຫ່ງການຊົງສ້າງຂອງພຣະອົງ
ໃນການວາງຮາກຖານສ້າງໂລກໄດ້ສຳເລັດແລ້ວ[4]ເພາະມີໃນພຣະຄັມພີຕອນຫນຶ່ງທີ່ພຣະອົງໄດ້ກ່າວເອົາໄວ້ກຽວກັບວັນທີເຈັດວ່າ,
"ພຣະເຈົ້າໄດ້ພັກຜ່ອນ ຈາກການທຳງານທັງສິ້ນຂອງພຣະອົງໃນວັນທີເຈັດ."[5]ແລະພຣະອົງກ່າວໄວ້ອີກວ່າ, "ພວກເຂົາຈະບໍ່ໄດ້
ເຂົ້າສູ່ການພັກສະຫງົບຂອງເຮົາເລີຍ."
[6]ດ້ວຍເຫດນີ້ເອງ ຈຶ່ງຍັງມີບາງຄົນທີ່ໄດ້ຮັບການສະຫງວນເອົາໄວ້ເພື່ອເຂົ້າສູ່ການພັກສະຫງົບຂອງພຣະອົງ,
ແລະນັບຈາກຊາວອິສະຣະເອນຈຳນວນຫລາຍທີ່ບໍ່ໄດ້ເຂົ້າສູ່ການພັກສະຫງົບ ເພາະພວກເຂົາບໍ່ເຊື່ອຟັງ.
[7]ພຣະເຈົ້າໄດ້ຕັ້ງວັນຫນຶ່ງຂຶ້ນມາອີກຊຶ່ງເອີ້ນວ່າ, "ວັນນີ້"ຫລັງຈາກນັ້ນອີກ ຫລາຍປີພຣະອົງ ໄດ້ເວົ້າຜ່ານທາງດາວິດ
ຢ່າງທີ່ໄດ້ມີອ້າງໄວ້ໃນພຣະຄັມພີ ວ່າ," ວັນນີ້ຖ້າຫາກທ່ານຟັງສຽງຂອງພຣະເຈົ້າແລະບໍ່ເຮັດໃຫ້ໃຈຂອງພວກທ່ານແຂງກະດ້າງໄປ."
[8]ເພາະຖ້າຫາກ ໂຢຊວຍ ໃຫ້ການພັກສະຫງົບແກ່ພວກເຂົາໄດ້, ພຣະເຈົ້າ ກໍຄົງບໍ່ໄດ້ກ່າວເຖິງວັນອື່ນອີກ.
[9]ດັ່ງນັ້ນຈຶ່ງຍັງຄົງມີວັນສະບາໂຕແຫ່ງການພັກສະຫງົບທີ່ສະຫງວນເອົາໄວ້ ສຳລັບໄພ່ພົນຂອງພຣະເຈົ້າ.[10]ດ້ວຍວ່າ, ຄົນທີ່ເຂົ້າສູ່ການພັກສະຫງົບ
ຂອງພຣະເຈົ້າກໍໄດ້ພັກຕົວເອງຈາກວຽກການຂອງຕົນ ເຫມືອນຢ່າງທີ່ພຣະເຈົ້າໄດ້ຊົງພັກນັ້ນ.[11]ດ້ວຍເຫດນັ້ນ ໃຫ້ພວກເຮົາອົດສາພະຍາຍາມ
ໃຫ້ໄດ້ເຂົ້າສູ່ການພັກສະຫງົບນັ້ນ ເພື່ອຈະບໍ່ໃຫ້ຜູ້ຫນຶ່ງຜູ້ໃດ ຕ້ອງລົ້ມລົງໃນການບໍ່ເຊື່ອຟັງເຫມືອນກັບທີ່ພວກເຂົາໄດ້ທຳນັ້ນ.
[12]ເພາະວ່າ ພຣະທັມຂອງພຣະເຈົ້ານັ້ນມີຊີວິດຢູ່ພ້ອມທຳງານແລະ ຄົມຍິ່ງກວ່າດາບສອງຄົມທຸກດວງທີ່ ແທງທະລຸເຂົ້າໄປເພື່ອແຍກຈິດຈາກ
ວິນຍານ ແຍກຂໍ້ຕໍ່ຈາກໄຂກະດູກ ສາມາດຮູ້ເຖິງຄວາມຄິດ ແລະ ເຈດຕະນາໃນຫົວໃຈ.[13]ບໍ່ມີສິ່ງໃດທີ່ ຖືກສ້າງຂຶ້ນແລ້ວຖືກປິດບັງໄວ້ຈາກ
ພຣະພັກພຣະເຈົ້າໄດ້. ແຕ່ທຸກສິ່ງໄດ້ປາກົດແລະເປີດເຜີຍຕໍ່ສາຍຕາຂອງພຣະອົງ ຜູ້ທີ່ເຮົາຈະຕ້ອງລາຍງານນັ້ນ.
[14]ດ້ວຍເຫດນີ້ຕັ້ງແຕ່ວັນທີ່ເຮົາ ມີພຣະມະຫາປະໂລຫິດຜູ້ຍິ່ງໃຫຍ່ ທີ່ໄດ້ຜ່ານຟ້າສະຫວັນ, ມາແລ້ວ ຄື ພຣະເຢຊູຄຣິດເຈົ້າ
ພຣະບຸດຂອງພຣະເຈົ້າ, ກໍໃຫ້ເຮົາ ຢຶດຄວາມເຊື່ອ ຂອງເຮົາເອົາໄວ້ໃຫ້ຫມັ້ນຄົງ.[15]ເພາະ ພວກເຮົາບໍ່ໄດ້
ມີມະຫາປະໂລຫິດທີ່ບໍ່ສາມາດຈະເຫັນໃຈ ໃນຄວາມອ່ອນແອຂອງພວກເຮົາ, ແຕ່ເຮົາມີພຣະອົງຜູ້ທີ່ຖືກທົດລອງ ເຫມືອນຢ່າງ ເຮົາທຸກປະການ,
ຍົກເວັ້ນການທີ່ພຣະອົງຊົງບໍ່ມີບາບ.[16]ໃຫ້ເຮົາເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນ, ດ້ວຍຄວາມຫມັ້ນໃຈເພື່ອພວກເຮົາຈະໄດ້ ຮັບພຣະເມດຕາ
ແລະ ພົບພຣະຄຸນທີ່ຈະຊ່ວຍພວກເຮົາໄດ້ໃນເວລາທີ່ມີຄວາມຈຳເປັນ.


generated on Tue Jun 17 19:01:42 2025

5 [1]ເພາະມະຫາປະໂລຫິດທຸກຄົນ, ຖືກເລືອກຈາກ ມະນຸດ, ແລະໄດ້ຮັບການແຕ່ງຕັ້ງໃຫ້
ເປັນຜູ້ຮັບໃຊ້ແທນມະນຸດໃນເລື່ອງຕ່າງໆກ່ຽວກັບພຣະເຈົ້າ ເພື່ອເຂົາຈະເປັນຜູ້ທີ່ຖວາຍ ເຄື່ອງຖວາຍແລະເຄື່ອງບູຊາ ເພື່ອລຶບລ້າງບາບ.
[2]ເພິ່ນສາມາດປະຕິບັດ ຢ່າງອ່ອນໂຍນ ຕໍ່ ຄົນທີ່ໂງ່ເຂົາແລະດື້ດ້ານເພາະເພິ່ນເອງ ກໍຖືກຫຸ້ມລອ້ມໄປດ້ວຍຄວາມອ່ອນແອ.[3]ເພາະເຫດນີ້,
ເອງເພິ່ນຈຶ່ງຕ້ອງຖວາຍ ເຄື່ອງບູຊາ ສໍາລັບຄວາມຜິດບາບຂອງຕົວເອງເຫມືອນກັບທີ່ເຂົາກະທໍາເພື່ອຄວາມບາບຂອງປະຊາຊົນດ້ວຍ.

[4]ການທີ່ຄົນໃດໄດ້ຮັບກຽດນີ້ຍອມບໍ່ແມ່ນເພື່ອຕົວຂອງເຂົາເອງແຕ່ເຂົາໄດ້ຮັບການຊົງເອີ້ນຈາກພຣະເຈົ້າ, ເຫມືອນກັບເອີ້ນອາໂຣນ.
[5]ແລະເຊັ່ນດຽວກັນ ພຣະຄຣິດເອງກໍບໍ່ໄດ້ຍົກພຣະອົງເອງເພື່ອໄດ້ຮັບກຽດໃນການເປັນມະຫາປະໂລຫິດ
ແຕ່ພຣະເຈົ້າຜູ້ຊົງກ່າວກັບພຣະອົງນັ້ນກ່າວວ່າ, “ເຈົ້າເປັນບຸດຂອງເຮົາ; ວັນນີ້ເຮົາໄດ້ເປັນບິດາຂອງເຈົ້າ.”
[6]ເຫມືອນກັບທີ່ພຣະອົງໄດ້ກ່າວ ໃນຕອນອື່ນວ່າ, “ທ່ານເປັນປະໂລຫິດ ຕະຫລອດໄປຕາມແບບຂອງ ເມັນຄີເຊເດັກ.”
[7]ໃນຊ່ວງລະຫວ່າງການເປັນມະນຸດຂອງພຣະອົງນັ້ນ, ພຣະຄຣິດໄດ້ມອບຖວາຍ ທັງຄໍາອະທິຖານ ແລະຄໍາອ້ອນວອນ ດ້ວຍສຽງອັນດັງ
ແລະດ້ວຍນ້ໍາຕາໄຫລຕໍ່ພຣະເຈົ້າ, ຜູ້ຊົງ ສາມາດຊ່ວຍພຣະອົງໃຫ້ພົ້ນຈາກຄວາມຕາຍໄດ້ ພຣະເຈົ້າຊົງນ້ອມຮັບຟັງ ດ້ວຍພຣະທັຍສົງສານ.
[8]ເຖິງແມ່ນວ່າພຣະອົງ ຊົງເປັນພຣະບຸດແຕ່ພຣະອົງຮຽນຮູ້ ທີ່ຈະຍອມ ເຊື່ອຟັງ ຜ່ານທາງການທຸກຍາກຕ່າງໆຂອງພຣະອົງ.
[9]ພຣະອົງໄດ້ຖືກເຮັດໃຫ້ສົມບູນແລະໄດ້ເປັນຕົ້ນກໍາເນີດ ແຫ່ງຄວາມພົ້ນ ອັນຕະຫລອດໄປເປັນນິດ, ແກ່ຄົນທີ່ເຊື່ອຟັງພຣະອົງ.
[10]ພຣະອົງໄດ້ຮັບການອອກແບບໂດຍ ພຣະເຈົ້າເພື່ອໃຫ້ເປັນມະຫາປະໂລຫິດຕາມແບບ ເມັນຄີເຊເດັກ.
[11]ຍັງມີອີກຫລາຍຢ່າງທີ່ເຮົາຈະເວົ້າເຖິງພຣະເຢຊູຄຣິດເຈົ້າ, ແຕ່ກໍຍາກທີ່ຈະອະທິບາຍເນື່ອງຈາກ
ພວກທ່ານໄດ້ກາຍເປັນຄົນທີ່ເສີຍຊ້າໃນການຟັງແລ້ວ.
[12]ເຖິງແມ່ນເວລານີ້ພວກທ່ານຄວນຈະເປັນຄຣູໄດ້ແລ້ວ, ແຕ່ ພວກເຈົ້າກໍຍັງຕ້ອງການໃຫ້ມີຄົນ
ສອນພວກທ່ານເຖິງຫລັກການເບື້ອງຕົ້ນກ່ຽວກັບຖ້ອຍຄໍາຂອງພຣະເຈົ້າ, ພວກເຈົ້າຕ້ອງການນ້ໍານົມບໍ່ແມ່ນອາຫານແຂງ.[13]ດ້ວຍວ່າ,
ໃຜກໍຕາມທີ່ກິນນ້ໍານົມກໍຍັງບໍ່ຊໍານານ ໃນເລື່ອງຄວາມຊອບທັມ ເພາະເຂົາຍັງເປັນເດັກນ້ອຍຢູ່.[14]ອາຫານແຂງນັ້ນເປັນອາຫານສໍາລັບຜູ້ໃຫຍ່.
ຄົນເຫລົ່ານີ້ຄືຄົນທີ່ຄວນເປັນຜູ້ໃຫຍ່ເຮັດໃຫ້ເຂົາມີຄວາມເຂົ້າໃຈທີ່ຝຶກອົບຮົມພວກເຂົາໃຫ້ສາມາດ ສັງເກດວ່າສິ່ງໃດດີ ແລະສິ່ງໃດຊົ່ວ.

6 [1]ດັ່ງນັ້ນແລ້ວຂໍໃຫ້ພວກເຮົາອອກຈາກຄໍາສອນເບື້ອງຕົ້ນ ກ່ຽວກັບ ພຣະຄຣິດເຈົ້າ ແລະ ກ້າວໄປຂ້າງຫນ້າ ສູ່ຄວາມເປັນຜູ້ໃຫຍ່ແລ້ວ.

ຂໍໃຫ້ພວກເຮົາທີ່ຈະບໍ່ຕ້ອງວາງຮາກຖານເລື່ອງການກັບໃຈຈາກການງານແຫ່ງຄວາມຕາຍເລື່ອງຄວາມເຊື່ອໃນພຣະເຈົ້າອີກຄັ້ງຫນຶ່ງ[2]ຫລືເລື່ອງຮາກຖານຄໍາສອນ
ກ່ຽວກັບການບັບຕິສະມາພິທີວາງມື, ການເປັນຄືນມາຈາກຕາຍຂອງຄົນທີ່ຕາຍໄປແລ້ວ ແລະເລື່ອງການພິພາກສານິຣັນດອນ.
[3]ເຮົາຈະກະທໍາສິ່ງນີ້ຖ້າຫາກພຣະເຈົ້າຊົງອະນຸຍາດ.

[4]ເພາະ ມັນເປັນໄປບໍ່ໄດ້ສໍາລັບ ຄົນເຫລົ່ານັ້ນທີ່ເຄີຍໄດ້ຮັບຄໍາສອນມາແລ້ວເຄີຍໄດ້ຊີມຣົດຂອງປຣະທານຈາກສະຫວັນ
ເຄີຍມີສ່ວນຮ່ວມກັບພຣະວິນຍານບໍຣິສຸດເຈົ້າ[5]ແລະ ໄດ້ຊີມຣົດອັນດີແຫ່ງຖ້ອຍຄໍາຂອງພຣະເຈົ້າແລະພະລັງ
ຂອງຍຸກທີ່ຈະມາເຖິງ[6]ແຕ່ຄົນທີ່ລົ້ມລົງແລ້ວນັ້ນເປັນໄປບໍ່ໄດ້ທີ່ຈະຮື້ຟື້ນພວກເຂົາ ມາສູ່ການກັບໃຈໃຫມ່ອີກໄດ້. ນີ້ເປັນ
ເພາະພວກເຂົາເອງຄຶງພຣະບຸດຂອງພຣະເຈົ້າເພື່ອຕົວຂອງພວກເຂົາເອງອີກຄັ້ງ, ແລະໄດ້ເຮັດໃຫ້ພຣະອົງອັບອາຍຢ່າງເປີດເຜີຍຕໍ່ທຸກຄົນ.
[7]ເພາະພື້ນດິນທີ່ດູດຮັບເອົານ້ໍາຝົນ ທີ່ຕົກລົງມາ, ແລະ ໃຫ້ເກີດພືດຜົນງອກຂຶ້ນໃຫ້ ປະໂຫຍດຕໍ່ຄົນທີ່ປູກຝັງເທິງແຜ່ນດິນນັ້ນ
ນີ້ຄືແຜ່ນດິນທີ່ໄດ້ຮັບພຣະພອນຈາກພຣະເຈົ້າ.[8]ແຕ່ ຖ້າແຜ່ນດິນນັ້ນໃຫ້ພືດທີ່ມີຫນາມ ຫລືວັດຊະພືດມັນ
ກໍບໍ່ມີຄ່າອັນໃດແລະຖືກຊົງປ້ອຍດ່າແລ້ວ. ໃນທີ່ສຸດກໍຈະຖືກເຜົາໄຟເສັ່ຽ.
[9]ພີ່ນ້ອງທີ່ຮັກ ເຖິງແມ່ນວ່າພວກເຮົາຈະເວົ້າດັ່ງນີ້ແຕ່ພວກເຮົາໄດ້ຮັບການເຮັດໃຫ້ສໍານຶກເຖິງສິ່ງທີ່ດີກວ່າກ່ຽວກັບພວກທ່ານ
ຄືສິ່ງຕ່າງໆທີ່ກ່ຽວກັບຄວາມລອດ.[10]ເພາະວ່າພຣະເຈົ້າ ບໍ່ໄດ້ຊົງອະຍຸຕິທັມ ທີ່ຈະລືມການງານຂອງພວກທ່ານ ແລະ
ຄວາມຮັກທີ່ພວກທ່ານໄດ້ສະແດງ ອອກເພື່ອພຣະນາມຂອງພຣະອົງ ເນື່ອງຈາກການທີ່ພວກທ່ານໄດ້ປະຕິບັດບັນດາຜູ້ເຊື່ອແລະຍັງຄົງເຮັດຢູ່.
[11]ເຮົາປາຖນາ ອັນຍິ່ງໃຫຍ່ທີ່ພວກທ່ານ ແຕ່ລະຄົນຈະສະແດງຄວາມພາກພຽນຈົນເຖິງທີ່ສຸດ
ເພື່ອເຫັນແກ່ຄວາມຫມັ້ນໃຈຢ່າງເຕັມຂະຫນາດນັ້ນ.[12]ທັງນີ້ ເພື່ອພວກທ່ານບໍ່ກັບກາຍເປັນຄົນກຽດຄ້ານ ແຕ່ຮຽນແບບບັນດາຄົນເຫລົ່ານັ້ນ
ທີ່ອາໄສຄວາມເຊື່ອ ແລະ ຄວາມພຽນອົດທົນເຮັດໃຫ້ພວກເຂົາໄດ້ຮັບມໍຣະດົກຕາມ ພຣະສັນຍາ.
[13]ເມື່ອພຣະເຈົ້າຊົງເຮັດພັນທະສັນຍາຕໍ່ອັບຣາຮາມພຣະອົງສາບານໂດຍອ້າງເຖິງພຣະອົງເອງເພາະບໍ່ມີໃຜທີ່ຍິ່ງ
ໃຫຍ່ກວ່າພຣະອົງໃນການອ້າງເພື່ອສາບານໄດ້[14]ພຣະອົງກ່າວວ່າເຮົາຈະອວຍພອນເຈົ້າຢ່າງແນ່ນອນແລະເຮົາຈະເພີ່ມພູນຢ່າງຍິ່ງໃຫຍ່ໃຫ້ແກ່ເຈົ້າ[15]ໂດຍເຫດນີ້ເອງ
[16]ເພາະມະນຸດເຄີຍສາບານໂດຍອ້າງເຖິງໃຜບາງຄົນທີ່ຍິ່ງໃຫຍ່ກວ່າຕົນ.
ຄໍາສາບານເປັນຄໍາເປັນຄໍາຢືນຢັນສຸດທ້າຍທີ່ເຮັດໃຫ້ການຖົກຖຽງກັນສິ້ນສຸດລົງ[17]ເມື່ອພຣະເຈົ້າຕັດສິນໃຈທີ່ຈະສໍາແດງໃຫ້ຊັດເຈນຫລາຍຂຶ້ນຕໍ່ບັນດາຜູ້ທີ່ຈະຮັບມໍ
ຕາມພຣະສັນຍາຂອງພຣະອົງ ຕາມພຣະປະສົງທີ່ບໍ່ປ່ຽນແປງຂອງພຣະອົງນັ້ນ ພຣະອົງຈຶ່ງຊົງຢືນຢັນ ດ້ວຍຄໍາສາບານຂອງພຣະອົງເອງ.
[18]ເພື່ອສິ່ງທີ່ບໍ່ສາມາດປ່ຽນແປງໄດ້ສອງຢ່າງຄື: ພຣະເຈົ້າຈະກ່າວຄໍາຕົວະບໍ່ໄດ້, ກັບພວກເຮົາທີ່ໄດ້ຫນີເຂົ້າມາລີ້ພັຍຈະໄດ້ມີກໍາລັງໃຈ
ຢ່າງເຂັ້ມແຂງເພື່ອຍຶດຫມັ້ນຢ່າງເຕັມທີ່ໃນຄວາມເຊື່ອຫມັ້ນທີ່ໄດ້ວາງໄວ້ຕໍ່ຫນ້າເຮົານັ້ນ.
[19]ພວກເຮົາມີຄວາມຫມັ້ນໃຈນີ້ທີ່ເປັນເຫມືອນສະຫມໍທີ່ປອດພັຍແລະເຊື່ອໃຈ, ໄດ້ສໍາລັບຈິດວິນຍານຂອງພວກເຮົາເປັນ
ຄວາມຫມັ້ນໃຈເພື່ອຈະເຂົ້າໄປຍັງສະຖານສັກສິດທີ່ສຸດຢູ່ເບື້ອງຫລັງຜ້າກັ້ງ,[20]ພຣະເຢຊູຄຣິດເຈົ້າ
ໄດ້ສະເດັດເຂົ້າໄປສະຖານແຫ່ງນັ້ນໃນຖານະຜູ້ບຸກເບີກສໍາລັບພວກເຮົາ ຄືເປັນພຣະມະຫາປະໂລຫິດ ຕະຫລອດໄປ ຕາມແບບເມັນຄີເຊເດັກ.


generated on Tue Jun 17 19:01:42 2025

7 [1]ສ່ວນເມັນຄີເຊເດັກ, ຜູ້ນີ້ຄືກະສັດ ແຫ່ງເມືອງຊາເລັມຜູ້ເປັນປະໂລຫິດ ຂອງພຣະເຈົ້າຜູ້ສູງສຸດ
ຜູ້ທີ່ໄດ້ພົບອັບຣາຮາມຫລັງຈາກທີ່ກັບມາຈາກການຮົບກັບກະສັດທັງຫລາຍດ້ວຍຊັຍຊະນະ ແລະ ໄດ້ຊົງອວຍພອນແກ່ເພິ່ນ.
[2]ຄືຜູ້ນີ້ທີ່ອັບຣາຮາມໄດ້ຖວາຍຫນຶ່ງສ່ວນສິບຂອງທຸກສິ່ງໃຫ້ກັບເພິ່ນ ຊື່ຂອງເພິ່ນຄືເມັນຄີເຊເດັກ, ຫມາຍເຖິງ. ກະສັດແຫ່ງຄວາມຊອບທັມ.
ຕໍາແຫນ່ງຂອງເພິ່ນ ອີກຢ່າງຄືກະສັດແຫ່ງຊາເລັມ ຫມາຍເຖິງກະສັດແຫ່ງສັນຕິສຸກ.[3]ເພິ່ນຄືຜູ້ທີ່ບໍ່ມີບິດາ, ບໍ່ມີມານດາ
ບໍ່ມີບັນພະບຸຣຸດແລະບໍ່ມີແມ່ນແຕ່ຈຸດເລີ່ມຕົ້ນ ຫລືຈຸດສິ້ນສຸດຂອງຊີວິດແຕ່ເພິ່ນກໍມີຄວາມຄ້າຍເຫມືອນພຣະບຸດຂອງພຣະເຈົ້າ
ເພາະເພິ່ນຍັງຄົງເປັນປະໂລຫິດນີ້ສືບໆໄປ.

[4]ຈົ່ງເບິ່ງ
ຄວາມຍິ່ງໃຫຍ່ຂອງທ່ານຜູ້ນີ້ເຖີດແມ່ນແຕ່ອັບຣາຮາມບັນພະບຸຣຸດຂອງພວກເຮົາຍັງໄດ້ຖວາຍຫນຶ່ງສ່ວນສິບຈາກສິ່ງທັງຫລາຍທີ່ເຂົາໄດ້ມາຈາກການເຮັດເສິກໃຫ້ແ
[5]ໃນທາງຫນຶ່ງບັນດາເຊື້ອສາຍຂອງເລວີ ຜູ້ຮັບຖານະເປັນປະໂລຫິດ ໄດ້ຮັບຄໍາສັ່ງຈາກ ກົດບັນຍັດ ສັ່ງໃຫ້ຮວບຮວມສິບລົດຈາກປະຊາຊົນຄື
ຈາກພວກພີ່ນ້ອງຂອງຕົນເຖິງແມ່ນວ່າພວກເຂົາຈະມາຈາກເຊື້ອສາຍທາງກາຍຂອງອັບຣາຮາມດ້ວຍກໍຕາມ.
[6]ແຕ່ກົງກັນຂ້ວາມກັບເມັນຄີເຊເດັກຜູ້ທີ່ບໍ່ໄດ້ສືບເຊື້ອສາຍມາຈາກພວກເຂົາ ເພິ່ນຍັງຮັບສິບລົດຈາກອັບຣາຮາມ ແລະ ອວຍພອນອັບຣາຮາມ,
ຜູ້ທີ່ໄດ້ຮັບພຣະສັນຍາຂອງພຣະເຈົ້າ.
[7]ການທີ່ຜູ້ເລັກນ້ອຍໄດ້ຮັບພອນຈາກຜູ້ໃຫຍ່. ຍອມເປັນເລື່ອງທີ່ບໍ່ສາມາດປະຕິເສດໄດ້[8]ໃນກໍລະນີນີ້ຄືມະນຸດທີ່ຕ້ອງຕາຍທີ່ຮັບສິບລົດ
ແຕ່ໃນກໍລະນີເຊັ່ນນັ້ນກໍໄດ້ຮັບການພິສູດຢືນຢັນວ່າທ່ານເປັນຜູ້ມີຊີວິດຢູ່.[9]ຖ້າຈະເວົ້າໄປແລ້ວຄົນ ເລວີ ຜູ້ໄດ້ຮັບສິບລົດນັ້ນ
ກໍຍັງໄດ້ຖວາຍສິບລົດຜ່ານທາງອັບຣາຮາມດ້ວຍເຊັ່ນກັນ.[10]ເພາະວ່າ
ຄົນເລວີກໍຍັງຢູ່ໃນສາຍເລືອດຂອງບັນພະບຸຣຸດຂອງເຂົາເມື່ອຄັ້ງທີ່ເມັນຄີເຊເດັກພົບ ອັບຣາຮາມ.
[11]ດັ່ງນີ້ຖ້າຫາກຄວາມບໍຣິບູນພ້ອມສາມາດເປັນຈິງໄດ້ໂດຍຜ່ານທາງລະບົບປະໂລຫິດຂອງເຜົ່າເລວີແລ້ວ
(ເພາະພາຍໃຕ້ສິ່ງນີ້ເຮັດໃຫ້ປະຊາຊົນໄດ້ຮັບກົດບັນຍັດ), ແລ້ວເປັນຫຍັງຈຶ່ງຈໍາເປັນຕ້ອງ ມີປະໂລຫິດອື່ນອີກ ຕາມແບບຂອງເມັນຄີເຊເດັກ
ບໍ່ໄດ້ຕາມ ແບບຂອງອາໂຣນ?[12]ເພາະ ເມື່ອລະບອບປະໂລຫິດໄດ້ມີການປ່ຽນແປງໄປດັ່ງນັ້ນກົດບັນຍັດກໍຕ້ອງໄດ້ຮັບການປ່ຽນແປງດ້ວຍ.
[13]ສໍາລັບທ່ານຜູ້ທີ່ກໍາລັງໄດ້ຮັບການກ່າວເຖິງຍັງມາຈາກຊົນເຜົ່າອື່ນຊຶ່ງເປັນຊົນເຜົ່າທີ່ບໍ່ເຄີຍມີຜູ້ໃດເຮັດການບົວລະບັດທີ່ແທ່ນບູຊາ.
[14]ບັດນີ້ເປັນທີ່ປາກົດແຈ້ງແລ້ວວ່າ, ອົງພຣະຜູ້ເປັນເຈົ້າ ຂອງເຮົາໄດ້ ຖືກໍາເນີດມາຈາກຕະກູນຢູດາ ເປັນຕະກູນທີ່ໂມເຊ ບໍ່ເຄີຍກ່າວເຖິງ
ການເປັນປະໂລຫິດ ເລີຍ.
[15]ສິ່ງທີ່ພວກເຮົາກ່າວນັ້ນຍິ່ງຊັດເຈນຫລາຍຂຶ້ນເມື່ອປະໂລຫິດ ອີກຕົນຫນຶ່ງ
ເກີດຂຶ້ນໃນລັກສະນະດຽວກັນກັບເມັນຄີເຊເດັກ[16]ຈຶ່ງບໍ່ແມ່ນຕາມພື້ນຖານຂອງກົດບັນຍັດ
ທີ່ເຊື້ອສາຍທາງເນື້ອຫນັງຈະກາຍມາເປັນປະໂລຫິດແຕ່ເປັນໄປຕາມພື້ນຖານອານຸພາບຂອງຊີວິດທີ່ບໍ່ສາມາດເສື່ອມສູນໄດ້.
[17]ເພາະພຣະຄັມພີເປັນພະຍານເຖິງພຣະອົງວ່າ, “ທ່ານເປັນປະໂລຫິດຕະຫລອດໄປເປັນນິດໃນຕາມແບບຂອງເມັນຄີເຊເດັກ.”
[18]ເພາະໄດ້ມີການຍົກເລີກຄໍາສັ່ງກ່ອນຫນ້ານີ້ເນື່ອງຈາກມັນອ່ອນແອແລະບໍ່ເກີດປະໂຫຍດ[19]ເພາະ ກົດບັນຍັດນັ້ນບໍ່ໄດ້ເຮັດໃຫ້ສິ່ງໃດສົມບູນພ້ອມ,
ແຕ່ມີຄໍາແນະນໍາເຖິງຄວາມຫມັ້ນໃຈທີ່ດີກວ່າສໍາລັບອານາຄົດໂດຍຜ່ານການທີ່ພວກເຮົາເຂົ້າໄປໃກ້ພຣະເຈົ້າໄດ້.
[20]ແລະສິ່ງນີ້ ບໍ່ໄດ້ເກີດຂຶ້ນໂດຍປາສະຈາກການໃຫ້ຄໍາສາບານຄົນເຫລົ່ານັ້ນທີ່ເປັນປະໂລຫິດທີ່ບໍ່ໄດ້ໃຫ້ຄໍາສາບານໃດໆ.[21]ແຕ່
ພຣະອົງຜູ້ນີ້ຄືພຣະເຢຊູຄຣິດເຈົ້າໄດ້ມາເປັນປະໂລຫິດທີ່ໃຫ້ຄໍາສາບານ ໂດຍຜູ້ຫນຶ່ງທີ່ກ່າວເຖິງພຣະອົງວ່າ,“ອົງພຣະຜູ້ເປັນເຈົ້າຊົງສາບານ
ແລະຈະບໍ່ປ່ຽນພຣະທັຍ, ‘ທ່ານເປັນປະໂລຫິດນິຣັນດອນຂອງເຮົາ.’”
[22]ໂດຍສິ່ງນີ້ພຣະເຢຊູຄຣິດເຈົ້າຈຶ່ງໄດ້ຮັບຮອງພັນທະສັນຍາທີ່ດີກວ່າ.[23]ມີຫລາຍຄົນທີ່ຂຶ້ນມາເປັນປະໂລຫິດ
ເນື່ອງຈາກຄວາມຕາຍໄດ້ຂັດຂວາງເຮັດໃຫ້ພວກເຂົາບໍ່ ສາມາດເປັນໄດ້ຕໍ່ໄປ.[24]ກົງກັນຂ້າມກັບ ພຣະເຢຊູເຈົ້າ ທີ່ດໍາຣົງຢູ່ຊົ່ວນິຣັນດອນ,
ພຣະອົງຈຶ່ງເປັນປະໂລຫິດທີ່ຖາວອນ.
[25]ດ້ວຍເຫດນີ້ ພຣະອົງຈຶ່ງຊົງສາມາດຊ່ວຍບັນດາຄົນເຫລົ່ານັ້ນທີ່ເຂົ້າມາຫາພຣະເຈົ້າ
ໂດຍຜ່ານທາງພຣະອົງໃຫ້ພົ້ນໄດ້ຢ່າງສົມບູນເພາະພຣະອົງມີຊີວິດຢູ່ເພື່ອອະທິຖານທູນຂໍ ເພື່ອພວກເຂົາຢູ່ສະເຫມີ[26]ສໍາລັບພວກເຮົາ
ຄືພຣະອົງບໍ່ມີບາບ,. ບໍຣິສຸດ, ປາສະຈາກຜິດ ຖືກແຍກອອກຈາກຄົນບາບ, ແລະໄດ້ເປັນຜູ້ຍິ່ງໃຫຍ່ເຫນືອຟ້າສະຫວັນ.
[27]ພຣະອົງບໍ່ຈໍາເປັນຕ້ອງຖວາຍເຄື່ອງບູຊາເປັນປະຈໍາທຸກໆວັນ, ເຫມືອນກັບພວກມະຫາປະໂລຫິດຄົນອື່ນໆ,
ທີ່ໄດ້ຖວາຍສໍາລັບການບາບຂອງຕົນເອງກ່ອນຈາກນັ້ນຈຶ່ງຖວາຍສໍາລັບຄວາມບາບຂອງປະຊາຊົນ.
ພຣະອົງເຮັດສິ່ງນີ້ພຽງຄັ້ງດຽວພໍແລ້ວຄືເມື່ອພຣະອົງໄດ້ຖວາຍພຣະອົງເອງ[28]ຕາມກົດບັນຍັດ
ແຕ່ງຕັ້ງມະຫາປະໂລຫິດທີ່ເປັນມະນຸດຜູ້ມີຄວາມອ່ອນແອ, ແຕ່ຖ້ອຍຄໍາແຫ່ງການສາບານ ທີ່ມາພາຍຫລັງກົດບັນຍັດ, ໄດ້ເຈີມຕັ້ງພຣະບຸດ,
ຜູ້ທີ່ໄດ້ຮັບການຄວາມສໍາເລັດສືບໄປເປັນນິດ.


generated on Tue Jun 17 19:01:42 2025

8 [1]ເລື່ອງສຳຄັນທີ່ພວກເຮົາກຳລັງເວົ້າເຖິງຄື ພວກເຮົາມີພຣະມະຫາປະໂລຫິດຜູ້ຫນຶ່ງ
ທີ່ປຣະທັບຢູ່ເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າຜູ້ເຕັມໄປດ້ວຍຣິດເດດອານຸພາບໃນສະຫວັນສະຖານ.[2]ພຣະອົງຊົງເປັນຜູ້ຮັບໃຊ້
ຢູ່ໃນສະຖານທີ່ສັກສິດທີ່ສຸດ, ຄືຢູ່ໃນຫໍເຕັນສັກສິດທີ່ແທ້ຈິງ, ທີ່ອົງພຣະຜູ້ເປັນເຈົ້າໄດ້ຕັ້ງຂຶ້ນ, ບໍ່ແມ່ນມະນຸດ.

[3]ເພາະມະຫາປະໂລຫິດທຸກຄົນ ໄດ້ຮັບການແຕ່ງຕັ້ງໃຫ້ຖວາຍທັງຂອງຖວາຍ ແລະ ເຄື່ອງບູຊາ.
ດ້ວຍເຫດນີ້ຈຶ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງມີສິ່ງຂອງເພື່ອມອບຖວາຍ.[4]ໃນເວລານີ້ ຖ້າຫາກພຣະຄຣິດຢູ່ໃນແຜ່ນດິນໂລກ
ພຣະອົງກໍຈະບໍ່ເປັນປະໂລຫິດ, ເນື່ອງຈາກມີບັນດາຄົນເຫລົ່ານັ້ນ, ທີ່ຖວາຍຕາມກົດບັນຍັດຢູ່ແລ້ວ.
[5]ພວກເຂົາຮັບໃຊ້ດ້ວຍສິ່ງທີ່ເປັນແບບຈຳລອງຫລື ເງົາຂອງສິ່ງທີ່ຢູ່ໃນສະຫວັນ. ເຫມືອນກັບໂມເຊ,
ທີ່ໄດ້ຮັບຄຳເຕືອນຈາກພຣະເຈົ້າເມື່ອເຂົາສ້າງຫໍເຕັນ. ພຣະເຈົ້າກ່າວວ່າ ເບິ່ງແມ.
ເຈົ້າສ້າງທຸກສິ່ງຕາມແບບຢ່າງທີ່ເຈົ້າໄດ້ຮັບການສຳແດງແກ່ເຈົ້າທີ່ເທິງພູເຂົາ.”
[6]ແຕ່ບັດນີ້ພຣະເຢຊູຄຣິດເຈົ້າ ໄດ້ຮັບພາລະກິດທີ່ດີກວ່າ ພຣະອົງເປັນຄົນກາງ, ສຳລັບພັນທະສັນຍາຫນຶ່ງທີ່ດີກວ່າ
ຊຶ່ງຕັ້ງຢູ່ເທິງພື້ນຖານຂອງພຣະສັນຍາທັງຫລາຍອັນປະເສີດກວ່າ.[7]ເພາະຖ້າຫາກພັນທະສັນຍາທຳອິດບໍ່ມີຂໍ້ບົກຜ່ອງແລ້ວ,
ກໍຄົງບໍ່ຈຳເປັນທີ່ຈະຕ້ອງມີພັນທະສັນຍາທີ່ສອງ.
[8]ເພາະເມື່ອພຣະເຈົ້າໄດ້ພົບຂໍ້ຜິດພາດກ່ຽວກັບປະຊາຊົນຂອງພຣະອົງ, ພຣະອົງກ່າວວ່າ ເບິ່ງແມ ວັນເຫລົ່ານັ້ນຈະມາເຖິງ. ອົງພຣະຜູ້ເປັນເຈົ້າ
ຊົງກ່າວວ່າ,‘ເບິ່ງແມ! ເມື່ອເຮົາຈະເຮັດພັນທະສັນຍາໃຫມ່ ກັບຍາດວົງຂອງອິສະຣາເອນ ແລະກັບຍາດຂອງວົງຢູດາ.
[9]ຊຶ່ງຈະບໍ່ເຫມືອນກັບພັນທະສັນຍາທີ່ ເຮົາໄດ້ເຮັດກັບບັນພະບຸຣຸດຂອງພວກເຂົາ ແລະນຳພວກເຂົາພາອອກມາຈາກດິນແດນອີຢິບ.
ເພາະພວກເຂົາບໍ່ຮັກສາພັນທະສັນຍາຂອງເຮົາ, ເຮົາຈຶ່ງບໍ່ສົນໃຈຕໍ່ພວກເຂົາ. ພຣະເຈົ້າກ່າວດັ່ງນີ້.
[10]ເພາະ‘ນີ້ຄືພັນທະສັນຍາທີ່ ເຮົາຈະເຮັດກັບຍາດວົງອິສະຣາເອນຫລັງຈາກວັນເຫລົ່ານັ້ນ. ອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້:
ເຮົາຈະໃສ່ກົດບັນຍັດເຂົ້າໄວ້ໃນຄວາມຄິດຈິດໃຈ ຂອງພວກເຂົາ. ແລະ ເຮົາຈະຈາຣຶກພວກມັນໄວ້ໃນຫົວໃຈຂອງພວກເຂົາ,
ເຮົາຈະເປັນພຣະເຈົ້າຂອງພວກເຂົາ ແລະ ພວກເຂົາຈະເປັນປະຊາຊົນຂອງເຮົາ.
[11]ພວກເຂົາ ຈະບໍ່ສອນເພື່ອນບ້ານ ແລະ
ພີ່ນ້ອງຂອງເຂົາແຕ່ລະຄົນອີກຕໍ່ໄປວ່າ,“ຈົ່ງຮູ້ຈັກພຣະເຈົ້າ”ເພາະທຸກຄົນຮູ້ຈັກເຮົາຕັ້ງແຕ່ຜູ້ທີ່ເລັກນ້ອຍທີ່ສຸດຈົນເຖິງ
ຜູ້ທີ່ເປັນໃຫຍ່ທີ່ສຸດໃນພວກເຂົາ.[12]ເພາະ ເຮົາຈະເມດຕາຕໍ່ການກະທຳອັນບໍ່ຊອບທັມຂອງພວກເຂົາ ແລະ
ເຮົາຈະບໍ່ຈົດຈຳຄວາມບາບຂອງພວກເຂົາອີກຕໍ່ໄປ.’”
[13]ໂດຍການກ່າວວ່າ, “ພັນທະສັນຍາໃຫມ່”ນັ້ນພຣະອົງໄດ້ເຮັດໃຫ້ ພັນທະສັນຍາທຳອິດເກົ່າໄປເພາະສິ່ງທີ່ລ້າສະໄຫມ
ແລະເກົ່າແລ້ວຈະຕ້ອງສູນຫາຍໄປ.


generated on Tue Jun 17 19:01:42 2025

9 1ພັນທະສັນຍາທຳອິດນັ້ນ ກໍມີຂໍ້ບັງຄັບສຳລັບການນະມັດສະການ ແລະ ມີສະຖານທີ່ສັກສິດໃນໂລກນີ້.
2ມີຫໍເຕັນສັກສິດທີ່ຈັດຕັ້ງຂຶ້ນມີຫ້ອງຊັ້ນນອກທີ່ເອົາໄວ້ຕັ້ງຫລັກຕະກຽງ ໂຕະ ແລະເຂົ້າຈີ່ທີ່ ຕັ້ງໄວ້ຫ້ອງທຳອິດນີ້ເອີ້ນວ່າ ສະຖານທີ່ສັກສິດ.

3ດ້ານຫລັງຜ້າກັ້ງຊັ້ນທີ່ສອງ ມີອີກຫ້ອງຫນຶ່ງເອີ້ນວ່າ ສະຖານທີ່ສັກສິດທີ່ສຸດ. 4ໃນຫ້ອງນີ້ມີແທ່ນທອງຄຳສຳລັບເຜົາເຄື່ອງຫອມ.
ແລະມີຫີບພັນທະສັນຍາຫຸ້ມດ້ວຍທອງຄຳຊຶ່ງຢູ່ໃນຫີບມີພາຊະນະທອງຄຳໃສ່ມານາ, ໄມ້ຄ້ອນເທົ້າຂອງອາໂຣນທີ່ປົ່ງຍອດ, ແລະ
ມີແຜ່ນຫີນຈາຣຶກພັນທະສັນຍາ. 5ຢູ່ເທິງຫີບພັນທະສັນຍານັ້ນ ມີຮູບເຄຣູບປະກອບດ້ວຍ
ສະຫງ່າຣາສີຂອງພຣະເຈົ້າກາງປີກປົກຄຸມທີ່ລຶບມົນທິນບາບຊຶ່ງພວກເຮົາບໍ່ສາມາດຈະພັນລະນາລະອຽດໃນເວລານີ້ໄດ້.
6ຫລັງຈາກສິ່ງຕ່າງໆເຫລົ່ານີ້ ໄດ້ຮັບການຈັດຕຽມເອົາໄວ້ແລ້ວ, ບັນດາປະໂລຫິດທັງຫລາຍກໍຈະເຂົ້າໄປໃນຫໍເຕັນສັກສິດ
ຊັ້ນນອກເພື່ອປະກອບພິທີຂອງພວກເຂົາ. 7ມີພຽງແຕ່ມະຫາປະໂລຫິດເທົ່ານັ້ນທີ່ຈະເຂົ້າໄປໃນຫ້ອງຊັ້ນທີ່ສອງເປັນເວລາປີລະຫນຶ່ງຄັ້ງເທົ່ານັ້ນ.
ເຂົາບໍ່ໄດ້ຕຽມເລືອດເພື່ອຖວາຍໃຫ້ກັບຕົວເອງເທົ່ານັ້ນແກ່ເພື່ອຄວາມບາບທີ່ບໍ່ເຈດຕະນາຂອງປະຊາຊົນດ້ວຍ.
8ພຣະວິນຍານບໍຣິສຸດເຈົ້າ
ໄດ້ສະແດງເຖິງຫົນທາງເພື່ອເຂົ້າສູ່ສະຖານທີ່ສັກສິດທີ່ສຸດນັ້ນຈະບໍ່ໄດ້ຮັບການເປີດເຜີຍຕາບໃດທີ່ຫ້ອງຊັ້ນນອກນັ້ນຍັງຄົງຕັ້ງຫມັ້ນຄົງຢູ່.
9ນີ້ເປັນພາບເຄື່ອງຫມາຍເຖິງສະໄຫມປັດຈຸບັນ ທັງຂອງຖວາຍແລະ
ເຄື່ອງບູຊາທີ່ໄດ້ຖວາຍໃນຕອນນີ້ນັ້ນບໍ່ສາມາດເຮັດໃຫ້ໃຈສຳນຶກຂອງຜູ້ນະມັດສະການສົມບູນດີພ້ອມໄດ້.
10ເພາະທັງຫມົດນີ້ກຽວຂ້ອງພຽງແຕ່ອາຫານເຄື່ອງດື່ມ ແລະສິ່ງຕ່າງໆສຳລັບພິທີລ້າງຊຳຣະເທົ່ານັ້ນ.
ສິ່ງເຫລົ່ານີ້ເປັນຂໍ້ບັງຄັບສຳລັບເນື້ອຫນັງທີ່ຖືກຈັດຕັ້ງຂຶ້ນຈົນກວ່າກົດເກນປ່ຽນໃຫມ່ຈະຖືກສ້າງຂຶ້ນ.
11ພຣະຄຣິດສະເດັດມາແລ້ວໃນຖານະ ພຣະມະຫາປະໂລຫິດແຫ່ງສິ່ງປະເສີດທັງຫລາຍທີ່ໄດ້ມາເຖິງ ພຣະອົງກ້າວຜ່ານເຂົ້າໄປໃນ
ສະຖານທີ່ສັກສິດທີ່ສຸດ ແລະຍິ່ງໃຫຍ່ກວ່າທີ່ບໍ່ໄດ້ສ້າງຂຶ້ນ ດ້ວຍມືມະນຸດແລະບໍ່ໄດ້ເປັນຂອງທີ່ສ້າງຂຶ້ນໃນໂລກນີ້.
12ບໍ່ແມ່ນໂດຍເລືອດຂອງແກະຫລືງົວເຖິກແຕ່ໂດຍພຣະໂລຫິດຂອງພຣະອົງເອງທີ່ເຮັດໃຫ້ພຣະອົງເຂົ້າໄປໃນສະຖານທີ່ສັກສິດທີ່ສຸດທີ່ພຣະອົງໄດ້ເຮັດພຽງຄັ້ງດຽວເພື
13ເພາະຖ້າຫາກເລືອດຂອງແບ້
ຫລືເລືອດງົວເຖິກແລະຂີ້ເຖົ່າຖ່ານຈາກງົວໂຕແມ່ທີ່ໂຮຍລົງເທິງຄົນເຫລົ່ານັ້ນທີ່ບໍ່ສະອາດໄດ້ນຳມາຖວາຍແກ່ພຣະເຈົ້າເພື່ອການຊຳຣະຮ່າງກາຍຂອງພວກເຂົາໃຫ້ສະ
14ແລ້ວຍິ່ງກວ່ານັ້ນ ພຣະໂລຫິດຂອງພຣະຄຣິດ, ຜູ້ຊຶ່ງໂດຍຜ່ານທາງພຣະວິນຍານນິຣັນດອນ
ທີ່ໄດ້ຖວາຍພຣະອົງເອງໂດຍປາສະຈາກຕຳຫນິແດ່ພຣະເຈົ້າ ຈະຊຳຣະໃຈສຳນຶກຂອງເຮົາຈາກການງານທີ່ນຳໄປສູ່ຄວາມຕາຍ
ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ໄດ້ຫລາຍກວ່ານັ້ນຈັກເທົ່າໃດ. 15ດ້ວຍເຫດຜົນນີ້ເອງ, ພຣະອົງ ຈຶ່ງເປັນຄົນກາງສຳລັບພັນທະສັນຍາໃຫມ່.
ແລະການທີ່ຄວາມຕາຍໄດ້ເກີດຂຶ້ນກໍເພື່ອປົດປ່ອຍຄົນເຫລົ່ານັ້ນທີ່ຢູ່ພາຍໃຕ້ພັນທະສັນຍາທຳອິດໃຫ້ເປັນອິສຣະຈາກຄວາມບາບຂອງພວກເຂົາ
ບັນດາຄົນເຫລົ່ານັ້ນທີ່ໄດ້ຮັບການຊົງເອີ້ນກໍຈະຮັບພັນທະສັນຍາແຫ່ງມໍຣະດົກນິລັນດອນ.
16ເພາະເມື່ອມີພິໄນກຳ, ຄວາມຕາຍຂອງບຸກຄົນຕ້ອງໄດ້ຮັບການພິສູດ 17ເພາະພິໄນກຳຈະມີຜົນໃຊ້ໄດ້ກໍຕໍ່ເມື່ອ,
ມີຄວາມຕາຍເກີດຂຶ້ນແຕ່ຖ້າບຸກຄົນທີ່ເຮັດໜັງສືພິໄນກຳນັ້ນຍັງມີຊີວິດຢູ່ ໜັງສືພິໄນກຳນັ້ນກໍຈະບໍ່ມີຜົນໃຊ້ໄດ້.
18ດັ່ງນັ້ນຈຶ່ງບໍ່ແມ່ນພັນທະສັນຍາທຳອິດເທົ່ານັ້ນທີ່ບໍ່ໄດ້ຖືກກໍ່ຕັ້ງຂຶ້ນ ໂດຍປາສະຈາກເລືອດ. 19ເພາະວ່າ
ໂມເຊໄດ້ປຣະທານຄຳສັ່ງທຸກປະການໃນກົດບັນຍັດໃຫ້ກັບປະຊາຊົນທັງຫມົດແລ້ວ, ເພິ່ນໄດ້ນຳເອົາເລືອດງົວເຖິກແລະ ເລືອດແບ້ເຖິກ,
ພ້ອມກັບນຳຂົນແກະສີແດງ, ແລະ ໃບຫູສົບມັດໜຶ່ງມາຈຸ່ມ, ແລະ ຊິດໃສ່ຫນັງສືມ້ວນແລະ ປະຊາຊົນທັງຫມົດ.
20"ນີ້ຄືເລືອດແຫ່ງພັນທະສັນຍາຊຶ່ງພຣະເຈົ້າໄດ້ຊົງສັ່ງເອົາໄວ້ສຳລັບພວກທ່ານ.
21" ແລະເຊັ່ນດຽວກັນ, ເພິ່ນໃຊ້ເລືອດຊິດໃສ່ຫໍເຕັນ ສັກສິດ ກັບເຄື່ອງໃຊ້ຕ່າງໆທີ່ໃຊ້ໃນ ພິທີກຳ. 22ແລະຕາມກົດບັນຍັດແລ້ວ
ແມ່ນເກືອບທຸກໆສິ່ງສະອາດໄດ້ໂດຍເລືອດ ແລະ ໂດຍປາສະຈາກການໄຫລຂອງເລືອດ ກໍບໍ່ມີການໃຫ້ອະພັຍບາບກັມ.
23ດ້ວຍເຫດນີ້ຈຶ່ງຈຳເປັນຢ່າງຍິ່ງທີ່ແບບຈຳລອງຂອງສິ່ງຂອງສິ່ງຕ່າງໆໃນ ສະຫວັນສົມຄວນໄດ້ຮັບການຊຳຣະໃຫ້ບໍຣິສຸດ
ໂດຍເຄື່ອງບູຊາເຫລົ່ານີ້ແຕ່ຢ່າງໃດກໍຕາມສິ່ງທີ່ເປັນຂອງສະຫວັນນັ້ນຕ້ອງໄດ້ຮັບການຊຳຣະໃຫ້ສະອາດໂດຍເຄື່ອງບູຊາທີ່ດີກວ່າ. 24ເພາະວ່າ
ພຣະຄຣິດບໍ່ໄດ້ສະເດັດເຂົ້າໄປໃນສະຖານສັກສິດທີ່ຖືກສ້າງຂຶ້ນດ້ວຍມືຂອງມະນຸດ, ຊຶ່ງເປັນແບບຢ່າງຂອງສິ່ງທີ່ເປັນຈິງ, ແຕ່ພຣະອົງໄດ້
ສະເດັດເຂົ້າສູ່ສະຫວັນໂດຍກົງຊຶ່ງປາກົດຕໍ່ພຣະພັກພຣະເຈົ້າເພື່ອພວກເຮົາເວລານີ້.
25ພຣະອົງ ບໍ່ໄດ້ໄປທີ່ນັ້ນເພື່ອຖວາຍ ພຣະອົງຫລາຍເທື່ອ, ເຫມືອນກັບທີ່ມະຫາປະໂລຫິດ ກະທຳ ຄືເຂົ້າໄປໃນບ່ອນສັກສິດທີ່ສຸດ,
ພ້ອມກັບເລືອດຂອງຄົນອື່ນເຂົ້າໄປຖວາຍທຸກໆປີ, 26ເພາະຖ້າຫາກເປັນເຊັ່ນນັ້ນແລ້ວພຣະອົງກໍບໍ່ຈຳເປັນຕ້ອງທົນທຸກທໍຣະມານຫລາຍເທື່ອ,
ນັບຈາກວາງຮາກສ້າງໂລກມາ. ແຕ່ບັດນີ້ ພຣະອົງໄດ້ຊົງປາກົດໃນປາຍຍຸກເພື່ອກຳຈັດບາບໂດຍການຖວາຍພຣະອົງ
ເອງເປັນເຄື່ອງບູຊາພຽງເທື່ອດຽວເປັນການສິ້ນສຸດ.
27ມະນຸດທຸກຄົນຖືກກຳນົດໃຫ້ຕາຍພຽງຄັ້ງດຽວ ແລະ
ຫລັງຈາກນັ້ນກໍເຂົ້າສູ່ການພິພາກສາ 28ເຊັ່ນດຽວກັນພຣະຄຣິດກໍຖວາຍພຣະອົງເອງພຽງຄັ້ງດຽວເພື່ອກຳຈັດບາບ
ຂອງຄົນຈຳນວນຫລວງຫລາຍ. ພຣະອົງຈະມາປາກົດເປັນຄັ້ງທີສອງ, ບໍ່ແມ່ນເພື່ອຈັດການກັບຄວາມບາບ,
ແຕ່ເພື່ອຄວາມພົ້ນຂອງຄົນເຫລົ່ານັ້ນທີ່ກຳລັງອົດທົນລໍຄອຍ ພຣະອົງຢູ່.


generated on Tue Jun 17 19:01:42 2025

10 [1]ເພາະ ກົດບັນຍັດນັ້ນ ເປັນພຽງແຕ່ເງົາຂອງບັນດາສິ່ງດີທີ່ຈະມາເຖິງ ບໍ່ແມ່ນຕົວຈິງຂອງສິ່ງເຫລົ່ານັ້ນ, ບັນດາຄົນທີ່ມາເຂົ້າເຝົ້າພຣະເຈົ້າ
ບໍ່ສາມາດໄດ້ຮັບການເຮັດໃຫ້ສົມບູນແບບໄດ້ໂດຍເຄື່ອງບູຊາທີ່ພວກປະໂຣຫິດນຳມາຖວາຍທຸກປີ[2]ເພາະຖ້າບໍ່ດັ່ງນັ້ນກໍຄົງຈະບໍ່ມີການຖວາຍບັນດາ
ເຄື່ອງບູຊາຕໍ່ໄປບໍ່ແມ່ນບໍ? ຖ້າຫາກພວກເຂົາໄດ້ຮັບການຊຳຣະໃຫ້ສະອາດພຽງຄັ້ງດຽວ ປັນການສິ້ນສຸດແລ້ວ
ຜູ້ນະມັດສະການກໍຈະບໍ່ຮູ້ສຶກຕົວວ່າຕົນເອງມີຄວາມບາບອີກຕໍ່ໄປ.[3]ແຕ່ໂດຍເຄື່ອງ
ບູຊາເຫລົ່ານັ້ນຈຶ່ງເຮັດໃຫ້ມີການເຕືອນໃຫ້ຣະນຶກເຖິງຄວາມບາບທຸກໆປີ.[4]ເພາະເປັນໄປບໍ່ໄດ້ທີ່, ເລືອດຂອງງົວເຖິກ ແລະ ເລືອດແບ້
ຈະຊຳຣະຄວາມບາບອອກໄປໄດ້.

[5]ເມື່ອພຣະຄຣິດເຈົ້າສະເດັດເຂົ້າມາໃນໂລກນີ້. ພຣະອົງຊົງກ່າວວ່າ, ບໍ່ແມ່ນ“ເຄື່ອງບູຊາຫລືຂອງຖວາຍ ທີ່ພຣະອົງປາຖນາແຕ່
ຄືກາຍຫນຶ່ງທີ່ພຣະອົງຊົງຈັດຕຽມເອົາໄວ້ສຳລັບຂ້າພຣະອົງ.[6]ພຣະອົງບໍ່ໄດ້ພໍພຣະທັຍຕໍ່ເຄື່ອງເຜົາບູຊາ ແລະເຄື່ອງບູຊາລຶບລ້າງບາບ[7]ແລ້ວ
ຂ້ານ້ອຍຈຶ່ງທູນວ່າ,‘ຂ້າແດ່ພຣະເຈົ້າ ຂ້ານ້ອຍຢູ່ທີ່ນີ້ເພື່ອຈະເຮັດຕາມນ້ຳພຣະທັຍຂອງພຣະອົງ. ດັ່ງທີ່ມີບັນທຶກໄວ້ໃນຫນັງສືມ້ວນນັ້ນ.’”
[8]ຄັ້ງທຳອິດທີ່ພຣະອົງຊົງກ່າວວ່າ, ພຣະເຈົ້າບໍ່ໄດ້ປາຖນາ“ເຄື່ອງບູຊາ ແລະ ເຄື່ອງຖວາຍ” ກັບ “ເຄື່ອງເຜົາບູຊາ ແລະ ເຄື່ອງບູຊາລຶບລ້າງບາບ
ພຣະອົງບໍ່ໄດ້ພໍພຣະທັຍໃນສິ່ງເຫລົ່ານັ້ນ.”ນີ້ຄືເຄື່ອງບູຊາທີ່ຖວາຍຕາມກົດບັນຍັດ[9]ແລ້ວຈາກນັ້ນພຣະອົງຈຶ່ງກ່າວ ວ່າ, “ຂ້າແດ່ພຣະເຈົ້າ
ຂ້າພຣະອົງຢູ່ທີ່ນີ້ເພື່ອເຮັດຕາມນ້ຳພຣະທັຍຂອງພຣະອົງ.”
ພຣະອົງຊົງຍົກເລີກການຖວາຍບູຊາຢ່າງທຳອິດເພື່ອສະຖາປານາລະບຽບການຖວາຍຢ່າງທີ່ສອງ[10]ໃນລະບຽບປະຕິບັດຄັ້ງທີ່ສອງນັ້ນ
ພວກເຮົາຖືກມອບຖວາຍໃຫ້ກັບພຣະເຈົ້າຕາມນ້ຳພຣະທັຍຂອງພຣະອົງຜ່ານທາງການຖວາຍ ພຣະກາຍ
ຂອງພຣະເຢຊູຄຣິດເຈົ້າພຽງຄັ້ງດຽວທຸກຄົນ.
[11]ໃນທາງຫນຶ່ງປະໂລຫິດທຸກຄົນ ຕ້ອງຍືນຍອມເພື່ອປະຕິບັດພຣະເຈົ້າທຸກວັນ ເຂົາຖວາຍເຄື່ອງບູຊາ
ແບບດຽວກັນທຸກວັນເຖິງແມ່ນວ່າເຄື່ອງບູຊາເຫລົ່ານັ້ນ
ບໍ່ສາມາດຊຳຣະບາບກັມໄດ້ເລີຍກໍຕາມ[12]ແຕ່ກົງກັນຂ້ວາມພຣະຄຣິດເຈົ້າໄດ້ຖວາຍເຄື່ອງບູຊາຄັ້ງດຽວ ເພື່ອຊຳຣະລ້າງບາບກັມແລ້ວ
ເປັນການຖວາຍຊຶ່ງນຳໃຊ້ໄດ້ຕະຫລອດໄປ, ແລ້ວພຣະອົງກໍນັ່ງທີ່ເບື້ອງຂວາ ພຣະຫັດຂອງພຣະເຈົ້າ.[13]ພຣະອົງກຳລັງລໍຄອຍຈົນກວ່າ
ພວກສັດຕຣູຂອງພຣະອົງ ຈະຖືກເຮັດໃຫ້ຫມູບຢູ່ໃຕ້ຕີນຂອງພຣະອົງ.[14]ເພາະ
ດ້ວຍການຖວາຍເຄື່ອງບູຊາພຽງຄັ້ງດຽວພຣະອົງໄດ້ເຮັດໃຫ້ຄົນທັງຫລາຍ ທີ່ຖືກມອບຖວາຍໃຫ້ແກ່ພຣະເຈົ້ານັ້ນສົມບູນແບບຊົ່ວນິຣັນດອນ.
[15]ແລະພຣະວິນຍານບໍຣິສຸດເຈົ້າໄດ້ເປັນພະຍານໃຫ້ແກ່ພວກເຮົາດ້ວຍ ເພາະພຣະອົງກ່າວຄັ້ງແລກວ່າ,[16]“ນີ້ຄືພັນທະສັນຍາທີ່
ເຮົາຈະເຮັດກັບພວກເຂົາຫລັງຈາກວັນເຫລົ່ານັ້ນອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເຮົາຈະໃສ່ກົດບັນຍັດຂອງເຮົາໃນຈິດໃຈຂອງພວກເຂົາ ແລະ
ເຮົາຈະຈາຣຶກກົດບັນຍັດເຫລົ່ານັ້ນໄວ້ໃນຄວາມຄິດຈິດໃຈຂອງພວກເຂົາ.’”
[17]“ເຮົາຈະບໍ່ຈົດຈຳຄວາມບາບ ແລະ ຄວາມຊົ່ວຊ້າຂອງພວກເຂົາອີກຕໍ່ໄປ.”[18]ບັດນີ້ທີ່ໃດມີການໃຫ້ອະພັຍ
ສຳລັບສິ່ງເຫລົ່ານີ້ແລ້ວທີ່ນັ້ນກໍບໍ່ຈຳເປັນຕ້ອງມີເຄື່ອງບູຊາລຶບລ້າງບາບອີກຕໍ່ໄປ.
[19]ດ້ວຍເຫດນີ້ພີ່ນ້ອງທັງຫລາຍ ພວກເຮົາຈຶ່ງມີຄວາມຫມັ້ນໃຈທີ່ຈະເຂົ້າໄປໃນສະຖານອັນສັກສິດທີ່ສຸດ
ໂດຍທາງພຣະໂລຫິດຂອງພຣະເຢຊູຄຣິດເຈົ້າ[20]ນັ້ນຄືຫົນທາງໃຫມ່ແລະເປັນທາງທີ່ມີຊີວິດ
ທີ່ພຣະອົງໄດ້ເປີດໃຫ້ສຳລັບພວກເຮົາໂດຍຜ່ານທາງຜ້າກັ້ງນັ້ນ, ຊຶ່ງຫມາຍເຖິງກາຍທີ່ເປັນເນື້ອຫນັງຂອງພຣະອົງ.
[21]ແລະເພາະພວກເຮົາມີພຣະມະຫາປະໂລຫິດທີ່ຍິ່ງໃຫຍ່ເຫນືອບ້ານຂອງພຣະເຈົ້າ[22]ຂໍໃຫ້ເຮົາເຂົ້າມາໃກ້ດ້ວຍ ຄວາມຈິງໃຈ
ດ້ວຍຄວາມຫມັ້ນໃຈ, ຢ່າງເຕັມບໍຣິບູນໃນຄວາມເຊື່ອໃຫ້ຫົວໃຈຂອງເຮົາໄດ້ຮັບການຊຳຣະໃຫ້ສະອາດຈາກຈິດສຳນຶກທີ່ຊົ່ວຮ້າຍ
ແລະກາຍຂອງເຮົາໄດ້ຮັບການຊຳຣະລ້າງດ້ວຍນ້ຳທີ່ບໍຣິສຸດ.
[23]ຂໍໃຫ້ເຮົາຢືນຢັນຢ່າງຫມັ້ນຄົງໃນຄວາມຄາດຫວັງ ທີ່ເຕັມໄປດ້ວຍຄວາມຫມັ້ນໃຈຂອງພວກເຮົາດ້ວຍການບໍ່ຫວັ່ນໄຫວ,
ເພາະພຣະເຈົ້າຜູ້ໄດ້ສັນຍາໄວ້ແລ້ວນັ້ນເປັນຜູ້ສັດຊື່.
[24]ຂໍໃຫ້ພວກເຮົາພິຈາຣະນາວ່າເຮັດຢ່າງໃດຈຶ່ງຈະຈູງໃຈກັນແລະກັນໃຫ້ມີຄວາມຮັກແລະເຮັດຄຸນງາມຄວາມດີ.
[25]ຢ່າໃຫ້ພວກເຮົາປະການນະມັດສະການຮ່ວມກັນ, ເຫມືອນກັບທີ່ບາງຄົນເຄີຍປະນັ້ນ,
ແຕ່ຈົ່ງຫນູນໃຈກັນແລະກັນຫລາຍຂຶ້ນແລະຫລາຍຍິ່ງຂຶ້ນ ເມື່ອພວກທ່ານກໍເຫັນວ່າ ວັນນັ້ນກໍໃກ້ເຂົ້າມາເຖິງແລ້ວ.
[26]ເພາະເມື່ອພວກເຮົາທຳບາບດ້ວຍຄວາມຕັ້ງໃຈຫລັງຈາກທີ່ພວກເຮົາໄດ້ຮັບຄວາມຮູ້ເຖິງຄວາມຈິງແລ້ວ ເຄື່ອງບູຊາລຶບລ້າງບາບ
ກໍບໍ່ມີເຫຼືອຢູ່ອີກຕໍ່ໄປ.[27]ແຕ່ມີພຽງ,
ຄວາມຄາດຫວັງດ້ວຍຄວາມຢ້ານກົວເຖິງການພິພາກສາກັບໄຟແຫ່ງພຣະພິໂຣດທີ່ຈະເຜົາຜານບັນດາຄົນທີ່ຕໍ່ສູ້ພຣະເຈົ້າ.
[28]ໃຜກໍຕາມທີ່ໄດ້ປະຕິເສດກົດບັນຍັດຂອງໂມເຊກໍຈະຕ້ອງຕາຍ ໃນເມື່ອມີພະຍານ ສອງຫລື
ສາມປາກທີ່ເປັນພະຍານເຖິງເຂົາ[29]ພວກທ່ານຈົ່ງຄິດເບິ່ງ ວ່າຈະມີການລົງໂທດທີ່ຫນັກພຽງໃດນໍ? ສຳລັບຄົນທີ່ຢຽບຢ່ຳພຣະບຸດຂອງພຣະເຈົ້າ
ສຳລັບຄົນທີ່ປະຕິເສດຕໍ່ພຣະໂລຫິດແຫ່ງພັນທະສັນຍາເຫມືອນກັບວ່າເປັນສິ່ງທີ່ບໍ່ບໍຣິສຸດ ຄືພຣະໂລຫິດທີ່ພຣະອົງໄດ້ມອບຖວາຍແກ່ພຣະເຈົ້າ
ສຳລັບຄົນທີ່ປະຫມາດພຣະວິນຍານແຫ່ງພຣະຄຸນນັ້ນ?
[30]ເພາະພວກເຮົາຮູ້ຈັກພຣະອົງຜູ້ຊົງກ່າວວ່າ, “ການແກ້ແຄ້ນ ເປັນຂອງເຮົາ ເຮົາຈະຕອບແທນຄືນ.” ແລະ ກ່າວອີກວ່າ,
“ອົງພຣະຜູ້ເປັນເຈົ້າຈະພິພາກສາປະຊາກອນຂອງພຣະອົງ.”[31]ການຕົກຢູ່ໃນມືຂອງພຣະເຈົ້າຜູ້ຊົງຊີວິດຢູ່ກໍເປັນເລື່ອງທີ່ຫນ້າຢ້ານກົວຢ່າງໃຫຍ່ຫລວງ.
[32]ແຕ່ຈົ່ງຣະນຶກເຖິງວັນເກົ່າກ່ອນ
ທີ່ພວກທ່ານໄດ້ຮັບການເຮັດໃຫ້ຮູ້ແຈ້ງແລ້ວເຖິງການທີ່ພວກທ່ານອົດທົນຕໍ່ຄວາມຍາກລຳບາກໃນການທົນທຸກຢ່າງຍິ່ງໃຫຍ່.[33]ພວກທ່ານ
ຖືກເຢາະເຢີ້ຍຖືກຄົນຫມິ່ນປະຫມາດແລະ ຖືກຂົ່ມເຫັງແລະ
ພວກທ່ານກໍໄດ້ແບ່ງປັນຊ່ວຍເຫລືອບັນດາຄົນທີ່ເດີນຜ່ານຄວາມທຸກຍາກຢ່າງດຽວກັນນັ້ນ.

 generated on Tue Jun 17 19:01:42 2025

[34]ເພາະພວກທ່ານມີຄວາມເມດຕາສົງສານຕໍ່ຄົນເຫລົ່ານັ້ນທີ່ຖືກຄຸມຂັງ ແລະພວກທ່ານຍອມຮັບດ້ວຍຄວາມຊື່ນຊົມຍິນດີ
ເມື່ອຊັບສົມບັດຂອງພວກທ່ານຖືກຍາດຊິງໄປ ພວກທ່ານຮູ້ວ່າ ຕົນເອງຍັງມີຊັບສົມບັດທີ່ດີກວ່າ ແລະ ເປັນຊັບສົມບັດອັນເປັນນິຣັນດອນ.
[35]ດັ່ງນັ້ນ ຢ່າໄດ້ປະຖິ້ມຄວາມໝັ້ນໃຈຂອງທ່ານຊຶ່ງມີລາງວັນອັນຍິ່ງໃຫຍ່.[36]ເພາະພວກທ່ານຈຳເປັນຕ້ອງອົດທົນ
ເພື່ອພວກທ່ານຈະໄດ້ຮັບສິ່ງທີ່ພຣະເຈົ້າຊົງສັນຍາເອົາໄວ້ຫລັງຈາກທີ່ພວກທ່ານໄດ້ເຮັດຕາມພຣະປະສົງຂອງພຣະອົງແລ້ວ.
[37]ເພາະໃນ“ອີກບໍ່ດົນບໍ່ນານເທົ່າໃດ ພຣະອົງຜູ້ກຳລັງຈະສະເດັດມາກໍຈະສະເດັດມາ ຢ່າງແນ່ນອນແລະຈະບໍ່ຊັກຊ້າ.
[38]ຄົນຊອບທັມຂອງເຮົານັ້ນດຳເນີນຊີວິດໂດຍຄວາມເຊື່ອ. ແລະ ຖ້າຫາກເຂົາຫລົບຖອຍຫລັງ,
ເຮົາຈະບໍ່ພໍໃຈຄົນນັ້ນ.”[39]ແຕ່ພວກເຮົາບໍ່ໄດ້ເປັນເຫລົ່ານັ້ນທີ່ຫັນກັບໄປສູ່ຄວາມຈິບຫາຍ, ພວກເຮົາເປັນຄົນເຫລົ່ານັ້ນທີ່ມີຄວາມເຊື່ອເພື່ອຮັກສາ
ຈິດວິນຍານຂອງພວກເຮົາເອົາໄວ້.


generated on Tue Jun 17 19:01:42 2025

11 [1]ບັດນີ້ຄວາມເຊື່ອ ຄືຄວາມແນ່ໃຈກຽວກັບສິ່ງຕ່າງໆທີ່ ເຮົາຄາດຫວັງເອົາໄວ້ຢ່າງເຕັມທີ່.
ມີຄວາມຊັດແຈ້ງກຽວກັບເຫດການຕ່າງໆທີ່ຍັງບໍ່ເຫັນກັບຕາ. [2]ເພາະສິ່ງນີ້
ຈຶ່ງເຮັດໃຫ້ບັນດາບັນພະບູຣຸດໄດ້ຮັບການຍອມຮັບໃນຄວາມເຊື່ອຂອງພວກເຂົາ [3]ໂດຍຄວາມເຊື່ອພວກເຮົາຈຶ່ງເຂົ້າໃຈວ່າ
ໂລກຈັກກະວານຖືກສ້າງຂຶ້ນ ໂດຍພຣະທັມຂອງພຣະເຈົ້າ. ດັ່ງນັ້ນສິ່ງທີ່ເບິ່ງເຫັນຈຶ່ງບໍ່ໄດ້ຖືກສ້າງອອກມາຈາກສິ່ງທີ່ເບິ່ງເຫັນ.

[4]ເປັນເພາະຄວາມເຊື່ອທີ່ເຮັດໃຫ້ເຄື່ອງບູຊາທີ່ ອາເບັນ ຖວາຍແກ່ພຣະເຈົ້ານັ້ນດີກວ່າ ກາອີນ
ເພາະສິ່ງນີ້ຈຶ່ງເຮັດໃຫ້ເຂົາໄດ້ຮັບການຢືນຢັນວ່າເປັນຄົນຊອບທັມ
ເຂົາໄດ້ຮັບການຍອມຮັບເຊັ່ນນີ້ກໍເນື່ອງຈາກຂອງຖວາຍທີ່ເຂົາຖວາຍແກ່ພຣະເຈົ້າ ແລະເພາະສິ່ງນັ້ນຈຶ່ງເຮັດໃຫ້ ອາເບັນ
ຍັງຄົງເວົ້າຢູ່ແມ່ນວ່າເຂົາຈະຕາຍໄປແລ້ວກໍຕາມ.
[5]ເປັນເພາະຄວາມເຊື່ອທີ່ເຮັດໃຫ້ເອນົກ ຖືກຮັບຂຶ້ນໄປ ເພື່ອເຂົາຈະບໍ່ເຫັນຄວາມຕາຍ ບໍ່ມີຜູ້ໃດພົບເຫັນເພິ່ນ ເພາະພຣະເຈົ້າ ຊົງຮັບເຂົາໄປ.
ເພາະກ່ອນທີ່ເຂົາຖືກຮັບຂຶ້ນໄປມີ ພະຍານຫລັກຖານວ່າເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ.
[6]ແຕ່ຖ້າບໍ່ມີຄວາມເຊື່ອຈຶ່ງເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພຣະເຈົ້າພໍພຣະທັຍ ເພາະເປັນເລື່ອງທີ່ຈຳເປັນຢ່າງຍິ່ງ, ເມື່ອໃຜເຂົ້າມາເຝົ້າ
ພຣະເຈົ້າຈະຕ້ອງເຊື່ອວ່າ ພຣະອົງດຳຣົງຢູ່ ແລະພຣະອົງຊົງເປັນຜູ້ ປຣະທານລາງວັນໃຫ້ກັບຄົນເຫລົ່ານັ້ນທີ່ສະແຫວງຫາພຣະອົງ.
[7]ໂດຍຄວາມເຊື່ອຈຶ່ງເຮັດໃຫ້ໂນອາໄດ້ຮັບຂໍ້ຄວາມຈາກພຣະເຈົ້າກຽວກັບສິ່ງຕ່າງໆທີ່ຍັງເບິ່ງບໍ່ເຫັນ, ເພິ່ນຈຶ່ງຢຳເກງພຣະເຈົ້າ
ເຂົາຈຶ່ງສ້າງເຮືອເພື່ອຊ່ວຍກູ້ເອົາຄອບຄົວຂອງຕົນໃຫ້ພົ້ນຈາກຄວາມຕາຍ. ໂດຍການເຮັດເຊັ່ນນີ້ເພິ່ນໄດ້ກ່າວໂທດໂລກນີ້, ແລະ
ໄດ້ກາຍມາເປັນຜູ້ຮັບມໍຣະດົກ, ຄື ຄວາມຊອບທັມທີ່ໄດ້ມາໂດຍຄວາມເຊື່ອ.
[8]ໂດຍຄວາມເຊື່ອອັບຣາຮາມຈຶ່ງເຊື່ອຟັງເມື່ອໄດ້ຮັບການຊົງເອີ້ນແລະເຂົາອອກໄປຍັງສະຖານທີ່
ທີ່ເຂົາຈະໄດ້ຮັບເປັນມໍຣະດົກເຂົາອອກໄປໂດຍບໍ່ຮູ້ເລີຍວ່າຕົນກຳລັງຈະໄປໃສ.
[9]ເພາະຄວາມເຊື່ອເພິ່ນໄດ້ອາໄສຢູ່ໃນດິນແດນແຫ່ງພຣະສັນຍາໃນຖານະຄົນຕ່າງຊາດເພິ່ນອາໄສຢູ່ໃນຜ້າເຕັນຮ່ວມກັນກັບອີຊາກ ແລະ
ຢາໂຄບຜູ້ຊຶ່ງຮ່ວມຮັບມໍຣະດົກໃນພຣະສັນຍາອັນດຽວກັນ. [10]ເພາະເຂົາລໍຄອຍນະຄອນ
ທີ່ຕັ້ງຢູ່ເທິງຮາກຖານເປັນນະຄອນທີ່ໄດ້ຮັບການອອກແບບ ແລະກໍ່ສ້າງໂດຍພຣະເຈົ້າ.
[11]ໂດຍຄວາມເຊື່ອນີ້ເອງທີ່ເຮັດໃຫ້ອັບຣາຮາມໄດ້ຮັບພະລັງ ເພື່ອໃຫ້ບັງເກີດເຊື້ອສາຍ, ເຖິງແມ່ນນາງຊາຣາເປັນຫມັນກໍຕາມ,
ສິ່ງນີ້ເກີດຂຶ້ນແມ່ນວ່າເຂົາເອງກໍແກ່ຫລາຍແລ້ວ, ນີ້ເປັນເພາະພວກເຂົາຖືວ່າ
ພຣະອົງຜູ້ຊົງປຣະທານພຣະສັນຍາໃຫ້ແກ່ພວກເຂົານັ້ນເປັນຜູ້ສັດຊື່. [12]ເຫດສະນັ້ນ ຈາກຊາຍຄົນດຽວ ຊຶ່ງແມ່ນວ່າ
ເຫມືອນຄົນທີ່ຕາຍແລ້ວນັ້ນເຂົາກໍໄດ້ໃຫ້ກຳເນີດຄົນເຫລົ່ານັ້ນມີຫລວງຫລາຍເຫມືອນດວງດາວໃນທ້ອງຟ້າ ແລະ
ເຫມືອນກັບເມັດຊາຍຢູ່ໃນທະເລທີ່ບໍ່ສາມາດນັບຈຳນວນໄດ້.
[13]ສ່ວນຄົນເຫລົ່ານັ້ນໄດ້ຕາຍໄປໃນຄວາມເຊື່ອ ໂດຍທີ່ຍັງບໍ່ໄດ້ຮັບຕາມພຣະສັນຍາແຕ່ພວກເພິ່ນກໍໄດ້ເຫັນ ແລະ ຕ້ອນຮັບໄວ້ຕັ້ງແຕ່ໄກ
ພວກເພິ່ນຍອມຮັບວ່າພວກເພິ່ນເປັນຄົນຕ່າງຊາດທີ່ທ່ອງທ່ຽວໄປມາໃນໂລກ. [14]ສຳລັບຄົນເຫລົ່ານັ້ນທີ່ກ່າວຢ່າງນີ້,
ຍ່ອມສະແດງໃຫ້ເຫັນຄັກແລ້ວວ່າ ພວກເພິ່ນກຳລັງສະແຫວງຫາບ້ານທີ່ແທ້ຈິງ.
[15]ຖ້າຫາກພວກເພິ່ນຄິດເຖິງບ້ານເມືອງທີ່ພວກເພິ່ນຈາກມາ, ພວກເພິ່ນຄົງມີໂອກາດກັບຄືນໄປໄດ້.
[16]ແຕ່ເພາະພວກເພິ່ນປາຖນາບ້ານເມືອງທີ່ດີກວ່າຄືບ້ານເມືອງທີ່ຢູ່ໃນສະຫວັນ. ດ້ວຍເຫດນີ້ພຣະເຈົ້າຈຶ່ງ ບໍ່ລະອາຍ
ທີ່ພຣະອົງຖືກເອີ້ນວ່າເປັນພຣະເຈົ້າຂອງພວກເພິ່ນ ເນື່ອງຈາກພຣະອົງໄດ້ຈັດຕຽມນະຄອນຫນຶ່ງໄວ້ສຳລັບພວກເພິ່ນແລ້ວ.
[17]ໂດຍຄວາມເຊື່ອທີ່ເມື່ອອັບຣາຮາມ,
ຖືກທົດລອງເພື່ອໃຫ້ຖວາຍອີຊາກຜູ້ຊຶ່ງເປັນລູກຊາຍຄົນດຽວຂອງເຂົາແລະເປັນລູກທີ່ໄດ້ຮັບຕາມພຣະສັນຍາ.
[18]ຄືອັບຣາຮາມຜູ້ນີ້ທີ່ໄດ້ຮັບຄຳກ່າວເຖິງວ່າ, “ໂດຍຜ່ານທາງອີຊາກເຊື້ອສາຍຂອງເຈົ້າຈະຖືກນັບ.” [19]ອັບຣາຮາມເຊື່ອວ່າ ພຣະເຈົ້າຊົງຣິດສາມາດ
ບັນດານໃຫ້ອີຊາກຟື້ນຄືນມາຈາກຄວາມຕາຍໄດ້ ແລະ ປຽບໄດ້ວ່າເພິ່ນໄດ້ຮັບອີຊາກກັບຄືນມາຈາກຄົນທີ່ຕາຍໄປແລ້ວ.
[20]ແລະເຊັ່ນດຽວກັນໂດຍຄວາມເຊື່ອກຽວກັບສິ່ງຕ່າງໆທີ່ຈະມາເຖິງອີຊາກຈຶ່ງໄດ້ອວຍພອນຢາໂຄບ ແລະ ເອຊາວ.
[21]ໂດຍຄວາມເຊື່ອເມື່ອຢາໂຄບອວຍພອນລູກຊາຍຂອງໂຢເຊັບ ແຕ່ລະຄົນ, ຂະນະທີ່ເພິ່ນກຳລັງຈະຕາຍ, ຢາໂຄບນະມັດສະການພຣະເຈົ້າ
ເພິ່ນຫມູບລົງເຫນືອ
ຍອດໄມ້ເທົ້າຂອງຕົນ [22]ໂດຍຄວາມເຊື່ອເມື່ອໂຢເຊັບໃກ້ຈະສິ້ນໃຈຕາຍເຂົາຈຶ່ງໄດ້ກ່າວເຖິງການອົບພະຍົກອອກຈາກອີຢິບຂອງລູກຫລານອິສະຣາເອນ
ແລະໄດ້ສັ່ງເອົາໄວ້ກ່ຽວກັບກະດູກຂອງຕົນ.
[23]ໂດຍຄວາມເຊື່ອເມື່ອໂມເຊເກີດມາເຂົາ ຈຶ່ງຖືກພໍ່ແມ່ເຊື່ອງເຂົາເອົາໄວ້ ເປັນເວລາສາມເດືອນ
ເນື່ອງຈາກພວກເຂົາເຫັນວ່າໂມເຊເປັນເດັກທີ່ຫນ້າຮັກແລະ ພວກເພິ່ນບໍ່ຢ້ານກົວຄຳສັ່ງຂອງກະສັດ. [24]ໂດຍຄວາມເຊື່ອ, ເມື່ອໂມເຊໃຫຍ່ຂຶ້ນ,
ເພິ່ນໄດ້ປະຕິເສດທີ່ຈະຖືກເອີ້ນວ່າ ເປັນລູກຊາຍຂອງລູກສາວຂອງກະສັດຟາໂຣ. [25]ແຕ່ເພິ່ນກັບເລືອກການຢູ່ຮ່ວມທຸກລຳບາກ
ກັບປະຊາຊົນຂອງພຣະເຈົ້າ, ຫລາຍກ່ວາຈະໃຊ້ຊີວິດສະຫນຸກສະຫນານເພີດເພີນກັບຄວາມບາບພຽງຊົ່ວຄາວ.
[26]ເພິ່ນຖືວ່າຄວາມເສື່ອມເສັຽຈາກການຕິດຕາມພຣະຄຣິດ ນັ້ນກໍມີຄ່າ ກວ່າຊັບສົມບັດ ທັງໝົດຂອງປະເທດອີຢິບ.
ເພາະສາຍຕາຂອງເພິ່ນເລັງເຫັນບຳເຫນັດລາງວັນທີ່ເພິ່ນຈະໄດ້ຮັບນັ້ນ.
[27]ໂດຍຄວາມເຊື່ອໂມເຊຈຶ່ງໄດ້ອອກຈາກປະເທດ ເອຢິບເພິ່ນບໍ່ໄດ້ຢ້ານກົວ ຕໍ່ຄວາມໂກດຮ້າຍ ຂອງກະສັດ.
ເພິ່ນຍືນຢັດອົດທົນເຫມືອນກັບວ່າຕົນໄດ້ເຫັນ ຜູ້ຫນຶ່ງຊຶ່ງບໍ່ປາກົດໃຫ້ເຫັນ. [28]ໂດຍຄວາມເຊື່ອເພິ່ນຈຶ່ງໄດ້ຖືຮັກສາປັດສະຄາແລະພິທີຊິດເລືອດ,
ເພື່ອວ່າທູດແຫ່ງຄວາມຕາຍຈະບໍ່ສາມາດແຕະຕ້ອງ ບັນດາລູກກົກຂອງຊາວອິສະຣາເອນ.
[29]ເພາະມີຄວາມເຊື່ອພວກເພິ່ນຈຶ່ງຍ່າງຂ້າມທະເລແດງ ເຫມືອນກັບຍ່າງເທິງດິນແຫ້ງ, ເມື່ອຊາວອີຢິບລອງຂ້າມເບິ່ງ ນ້ຳກໍຖ້ວມ, ພວກເຂົາ
ຖືກເຮັດໃຫ້ຈົມນ້ຳຕາຍ. [30]ເພາະມີຄວາມເຊື່ອ, ກຳແພງເມືອງເຢຣີໂກຈຶ່ງພັງທະລາຍລົງຫລັງຈາກທີ່ພວກເຂົາໄດ້ຍ່າງອ້ອມ ເປັນເວລາເຈັດວັນ.
[31]ເພາະມີຄວາມເຊື່ອ, ຣາຮາບຍິງໂສເພນີຈຶ່ງບໍ່ໄດ້ຕາຍໄປພ້ອມກັນກັບພວກທີ່ບໍ່ເຊື່ອຟັງ, ເພາະນາງໄດ້ຕ້ອນຮັບຜູ້ສອດແນມເປັນຢ່າງດີ.


generated on Tue Jun 17 19:01:42 2025

[32]ຈະໃຫ້ ເຮົາຈະກ່າວສິ່ງໃດຕໍ່ໄປອີກແດ່? ເຮົາບໍ່ມີເວລາພໍທີ່ຈະກ່າວເຖິງກີເດໂອນ, ບາຣັກ, ແຊມຊັນ, ເຢັບທາ, ດາວິດ, ຊາມູເອນ ແລະ
ເຖິງພວກຜູ້ທຳນວາຍທັງຫລາຍ.[33]ໂດຍຜ່ານທາງຄວາມເຊື່ອ, ພວກເພິ່ນຈຶ່ງໄດ້ຊັຍຊະນະຣາຊະອານາຈັກຕ່າງໆ ພວກເພິ່ນເຮັດຢ່າງຍຸຕິທັມ
ແລະໄດ້ຮັບຕາມສັນຍາໄວ້, ພວກເພິ່ນໄດ້ງັບປາກສິງ,[34]ພວກເພິ່ນດັບອຳນາດຂອງໄຟ, ລອດພົ້ນຈາກຄົມດາບ, ໄດ້ຮັບການຮັກສາໃຫ້ຫາຍໂຣກ
ໄດ້ກາຍເປັນຄົນເຂັ້ມແຂງ, ກ້າຫານ, ໄດ້ຕີບັນດາກອງທັບແລະປາບເຫລົ່າສັດຕຣູໃຫ້ພ່າຍແພ້ແຕກຫນີໄປ.
[35]ພວກແມ່ຍິງກໍໄດ້ຄົນຂອງພວກເພິ່ນກັບຄືນມາໂດຍການຖືກຊົງບັນດານໃຫ້ເປັນຄືນມາຈາກຄວາມຕາຍ. ບາງຄົນຖືກທໍຣະມານ
ແຕ່ບໍ່ຍອມຮັບການປົດປ່ອຍເພື່ອພວກເພິ່ນຈະໄດ້ການຄືນຈາກຄວາມຕາຍຊຶ່ງດີກວ່າ.[36]ບາງຄົນຖືກທົດສອບໂດຍການຫຍໍ້ຫຍັນ ແລະຖືກຂ້ຽນຕີ
ຖືກລ່າມໂສ້ ແລະ ຖືກຄຸມຂັງ[37]ບາງຄົນ ຖືກແກ່ວງຫີນໃສ່, ຖືກເລື່ອຍເປັນທ່ອນ, ຖືກຂ້າຕາຍດ້ວຍດາບ, ໄດ້ຫົ່ມຫນັງແກະ ແລະ
ຫນັງແບ້ທຽວໄປມາ, ລຳບາກ ຍາກຈົນ, ຖືກຂົ່ມເຫັງ ແລະ ທົນທຸກ ເວດທະນາ.[38]ໂລກນີ້ກໍບໍ່ຄວນຄ່າສຳລັບຄົນເຫລົ່ານັ້ນ. ພວກເພິ່ນ
ໄດ້ທຽວໄປມາໃນຖິ່ນແຫ້ງແລ້ງກັນດານຢູ່ຕາມພູເຂົາຕາມຖ້ຳ ແລະຂຸດຂຸມຢູ່ໃນດິນ.
[39]ເຖິງແມ່ນວ່າພຣະເຈົ້າຊົງຮັບຮອງບັນດາຄົນເຫລົ່ານີ້
ເຫດເພາະຄວາມເຊື່ອຂອງພວກເພິ່ນພວກເພິ່ນກໍຍັງບໍ່ໄດ້ຮັບຕາມພຣະສັນຍາ[40]ພຣະເຈົ້າຊົງມີແຜນການທີ່ດີກວ່າສຳລັບພວກເຮົາ,
ເພາະຖ້ານອກຈາກ ພວກເຮົາ, ພວກເພິ່ນຈະບໍ່ໄດ້ຮັບການເຮັດໃຫ້ສຳເລັດໄດ້.

 generated on Tue Jun 17 19:01:42 2025

12 [1]ດ້ວຍເຫດນັ້ນ, ໃນເມື່ອພວກເຮົາມີພະຍານຫລວງຫລາຍທີ່ລ້ອມຮອບຢູ່ຢ່າງນີ້ແລ້ວ, ກໍຂໍໃຫ້ພວກເຮົາຖີ້ມທຸກສິ່ງທີ່ຖ່ວງຢູ່ ແລະ
ຄວາມບາບ ທີ່ຕິດແຫນ້ນໂດຍງ່າຍ, ຂໍໃຫ້ພວກເຮົາແລ່ນແຂ່ງ ຕາມທີ່ຖືກກຳນົດໄວ້ ສຳລັບພວກເຮົານັ້ນ,
ດ້ວຍຄວາມອົດທົນ[2]ໃຫ້ເຮົາຈົດຈໍ່ທີ່ພຣະເຢຊູຄຣິດເຈົ້າ ຜູ້ເລີ່ມຕົ້ນແລະເຮັດໃຫ້ຄວາມເຊື່ອຂອງເຮົາສົມບູນ ເພາະຄວາມຊື່ນຊົມຍິນດີ
ທີ່ວາງໄວ້ຕໍ່ຫນ້າພຣະອົງ. ພຣະອົງຈຶ່ງຍອມອົດທົນຕໍ່ໄມ້ກາງແຂນແລະການດູຫມິ່ນອັນຫນ້າອັບອາຍ
ແລະພຣະອົງປຣະທັບລົງເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າ.[3]ດັ່ງນັ້ນຂໍໃຫ້ຄິດເຖິງພຣະອົງ,
ຜູ້ທີ່ຍອມອົດທົນຕໍ່ການຖືກກົດຂີ່ຂົ່ມເຫັງຈາກພວກຄົນບາບ, ທີ່ຕໍ່ສູ້ພຣະອົງ ເພື່ອຫົວໃຈຂອງພວກທ່ານຈະບໍ່ອ່ອນລ້າແລະຍອມແພ້ເສັຽກ່ອນ.

[4]ພວກທ່ານຍັງບໍ່ເຖິງກັບຕ້ອງຕໍ່ສູ້ກັບຄວາມບາບຈົນຂະຫນາດເລືອດຕົກ.
[5]ແລະພວກທ່ານໄດ້ຫລົງລືມການຫນູນໃຈທີ່ເປັນຄຳສັ່ງສອນແກ່ພວກທ່ານໃນຖານະທີ່ເປັນລູກວ່າ,“ລູກຂອງເຮົາເອີຍ,
ຢ່າລະເລີຍການອົບຮົມສັ່ງສອນຂອງອົງພຣະຜູ້ເປັນເຈົ້າ, ແລະ ຢ່າເມື່ອຍລ້າເມື່ອທ່ານໄດ້ຮັບການວ່າກ່າວຈາກພຣະອົງ.[6]ເພາະ
ອົງພຣະຜູ້ເປັນເຈົ້າອົບຮົມສັ່ງສອນທຸກຄົນທີ່ພຣະອົງຊົງຮັກ, ແລະ ພຣະອົງທຳໂທດທຸກຄົນທີ່ພຣະອົງຍອມຮັບມາເປັນລູກ.”
[7]ຈົ່ງອົດທົນຕໍ່ຄວາມທຸກເຫມືອນວ່ານັ້ນ ຄືການອົບຮົມສັ່ງສອນ. ພຣະເຈົ້າປະຕິບັດຕໍ່ພວກທ່ານ ໃນຖານະທີ່ພວກທ່ານເປັນລູກຂອງພຣະອົງ.
ເພາະມີລູກຄົນໃດແດ່ທີ່ພໍ່ຂອງເຂົາຈະບໍ່ອົບຮົມສັ່ງສອນເຂົາ.[8]ແຕ່ຖ້າຫາກພວກທ່ານບໍ່ໄດ້ຮັບການອົບຮົມສັ່ງສອນ, ໂດຍທີ່ທຸກຄົນໄດ້ຮັບ,
ພວກທ່ານກໍເປັນລູກນອກກົດຫມາຍແລະບໍ່ແມ່ນລູກຂອງພຣະອົງ.
[9]ນອກຈາກນີ້ພວກເຮົາມີພໍ່ເປັນມະນຸດທີ່ເປັນຜູ້ອົບຮົມສັ່ງສອນ, ແລະພວກເຮົາກໍນັບຖືພໍ່ນັ້ນ. ແລ້ວພວກເຮົາ
ຈະຍິ່ງບໍ່ສົມຄວນເຊື່ອຟັງພຣະບິດາເຈົ້າແຫ່ງວິນຍານແລະຊົງພຣະຊົນຢູ່ບໍ?[10]ເພາະໃນທາງຫນຶ່ງພໍ່ເຫລົ່ານັ້ນ
ຍອມອົບຮົມສັ່ງສອນພວກເຮົາໃນຊົ່ວເວລາເລັກນ້ອຍ ຕາມທີ່ພວກເຂົາເຫັນວ່າເຫມາະສົມ ແຕ່ພຣະບິດາຊົງກະທຳ
ເພື່ອຜົນດີຕໍ່ຊີວິດຂອງພວກເຮົາ ແລະພວກເຮົາຈະສາມາດເຂົ້າສ່ວນໃນຄວາມບໍຣິສຸດຂອງພຣະອົງ.[11]ເມື່ອເວລາທີ່ມີການອົບຮົມສັ່ງສອນນັ້ນ
ບໍ່ເປັນຫນ້າຊື່ນໃຈເລີຍ ມີແຕ່ຄວາມເຈັບປວດ,
ແຕ່ພາຍຫລັງຈະກໍໃຫ້ເກີດຜົນແຫ່ງຄວາມຊອບທັມທີ່ເຕັມໄປດ້ວຍສັນຕິສຸກສຳລັບບັນດາຄົນທີ່ໄດ້ຮັບຝຶກອົບຮົມນັ້ນ.
[12]ດັ່ງນັ້ນ ຈົ່ງເສີມກຳລັງມືທີ່ອ່ອນລ້າ ແລະເຂົ່າທີ່ອ່ອນກຳລັງຂອງພວກທ່ານ.[13]ຈົ່ງສ້າງທາງຊື່ສຳລັບຕີນຍ່າງ.
ຂາທີ່ກະໂຜກກະເຜກຈະບໍ່ພິກໂບກແຕ່ຈະໄດ້ຮັບການຮັກສາໃຫ້ດີເປັນປົກກະຕິ.
[14]ຈົ່ງພະຍາຍາມທີ່ຈະຢູ່ຢ່າງສະຫງົບສຸກກັບທຸກຄົນ, ແລະຢູ່ໃນຄວາມບໍຣິສຸດ ເພາະຖ້າບໍ່ມີຄວາມບໍຣິສຸດກໍຈະບໍ່ມີຜູ້ໃດໄດ້ເຫັນ ພຣະເຈົ້າເລີຍ.
[15]ຈົ່ງຣະມັດຣະວັງເພື່ອຈະບໍ່ມີຜູ້ໃດຂາດຈາກ ພຣະຄຸນຂອງພຣະເຈົ້າ,
ແລະເພື່ອຈະບໍ່ມີຮາກຂົມຂື່ນງອກຂຶ້ນມາຊຶ່ງຈະສ້າງຄວາມເດືອດຮ້ອນແລະເພື່ອຄົນຫລວງຫລາຍ ຈະບໍ່ຖືກທຳລາຍ.
[16]ຈົ່ງຣະມັດຣະວັງຢ່າໃຫ້ມີການເຮັດຜິດສິນທັມທາງເພດ ຫລື
ມີຄົນອະທັມເຫມືອນກັບເອຊາວທີ່ໄດ້ຂາຍສິດທິການເປັນອ້າຍກົກຂອງຕົນແລກກັບອາຫານພຽງຄາບດຽວ.
[17]ເພາະພວກທ່ານກໍຮູ້ຢູ່ແລ້ວວ່າຫລັງຈາກນັ້ນ, ເມື່ອເອຊາວຢາກໄດ້ຮັບມໍຣະດົກທີ່ເປັນການອວຍພອນ, ລາວກໍຖືກປະຕິເສດ.
ເພາະບໍ່ມີໂອກາດໃຫ້ລາວໄດ້ກັບໃຈ ແມ່ນວ່າເຂົາຈະສະແຫວງຫາໂອກາດນັ້ນດ້ວຍນ້ຳຕາໄຫລກໍຕາມ,
[18]ເພາະພວກທ່ານບໍ່ໄດ້ມາເຖິງພູເຂົາທີ່ແຕະຕ້ອງໄດ້ພູເຂົາທີ່ລຸກເປັນໄຟໃນທີ່ມືດຫມົດຫວັງແລະ ມີພະຍຸ,[19]ພວກທ່ານບໍ່ໄດ້ມາຍັງສຽງແຕກກະຫື່ມ
ບໍ່ໄດ້ມາຍັງສຽງ ທີ່ກ່າວຖ້ອຍຄຳຕ່າງໆຊຶ່ງຄົນທັງຫລາຍຮ້ອງຂໍວ່າຢ່າກ່າວຖ້ອຍຄຳໃດໆແກ່ພວກເຂົາອີກ.
[20]ເພາະພວກເຂົາບໍ່ສາມາດທົນຕໍ່ສິ່ງທີ່ເປັນຄຳບັນຊາວ່າແມ່ນແຕ່ພວກສັດຖ້າຫາກໄປຕ້ອງພູເຂົານັ້ນ ກໍຈະຕ້ອງຖືກ ຄວ່າງກ້ອນຫີນ
ໃສ່ໃຫ້ຕາຍ.”[21]ສິ່ງທີ່ປາກົດນັ້ນກໍຫນ້າຢ້ານ ຫລາຍ. ຈົນໂມເຊໄດ້ກ່າວວ່າ, “ຂ້າພຣະເຈົ້າຢ້ານກົວຈົນຕົວສັ່ນ.”
[22]ແຕ່ພວກທ່ານໄດ້ມາເຖິງພູເຂົາຊີໂອນ, ແລະນະຄອນຂອງພຣະເຈົ້າຜູ້ຊົງພຣະຊົນຢູ່. ມາຍັງເຢຣູຊາເລັມໃນສະຫວັນ,
ມາຍັງທູດສະຫວັນນັບເປັນຈຳນວນຫມື່ນໆ ໃນການສະເຫລີມສະຫລອງ,[23]ພວກທ່ານໄດ້ມາ ເຖິງທີ່ຊຸມນຸມຂອງບັນດາລູກກົກ
ຜູ້ທີ່ຖືກນັບຊື່ໃນສະຫວັນແລ້ວ, ພວກທ່ານໄດ້ມາຍັງ ພຣະເຈົ້າຜູ້ຊົງເປັນຜູ້ພິພາກສາມະນຸດທຸກຄົນ ແລະໄດ້ມາຍັງບັນດາວິນຍານ ຂອງບັນດາ
ຄົນຊອບທັມ ທີ່ໄດ້ຮັບການເຮັດໃຫ້ສົມບູນແລ້ວ.[24]ແລະພວກທ່ານໄດ້ມາເຖິງພຣະເຢຊູຄຣິດເຈົ້າ ຜູ້ເປັນຄົນກາງແຫ່ງພັນທະສັນຍາໃຫມ່, ແລະ
ມາເຖິງພຣະໂລຫິດທີ່ຖືກຊິດໃສ່ຊຶ່ງສົ່ງສຽງດັງກວ່າເລືອດຂອງອາເບັນອີກ.
[25]ພວກທ່ານຢ່າປະຕິເສດພຣະອົງຜູ້ທີ່ກຳລັງກ່າວຢູ່ນັ້ນ. ເພາະຖ້າພວກເຂົາຫນີບໍ່ພົ້ນເມື່ອເຂົາປະຕິເສດພຣະອົງ ຜູ້ຊົງເຕືອນເຂົາໃນໂລກນີ້,
ແລ້ວພວກເຮົາຍິ່ງຈະຫນີບໍ່ພົ້ນຫລາຍກວ່າເທົ່າໃດ ຖ້າຫາກພວກເຮົາຫັນຫນີຈາກພຣະອົງຜູ້ຊົງເຕືອນເຮົາຈາກສະຫວັນ.
[26]ຄັ້ງຫນຶ່ງທີ່ສຽງຂອງພຣະອົງ ເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນ ແຕ່ບັດນີ້ພຣະອົງ ຊົງກ່າວສັນຍາໄວ້ວ່າ, “ອີກເທື່ອຫນຶ່ງ
ເຮົາຈະເຮັດໃຫ້ສັ່ນສະເທືອນ, ບໍ່ພຽງແຕ່ແຜ່ນດິນໂລກ ແຕ່ທັງຟ້າສະຫວັນເຫມືອນກັນ.”
[27]ຖ້ອຍຄຳເຫລົ່ານີ້ອີກເທື່ອຫນຶ່ງ”ຫມາຍເຖິງການສັ່ນເອົາສິ່ງຕ່າງໆທີ່ ຖືກເຮັດໃຫ້ຫວັ່ນໄຫວໄດ້ອອກໄປ ຄືສິ່ງຕ່າງໆທີ່ຖືກສ້າງຂຶ້ນມາ
ແລະສິ່ງຕ່າງໆທີ່ ບໍ່ສາມາດຖືກເຮັດໃຫ້ຫວັ່ນໄຫວໄດ້ກໍຈະຍັງຄົງເຫຼືອຢູ່.[28]ດ້ວຍເຫດນີ້,
ຈົ່ງຮັບເອົາຣາຊະອານາຈັກຂອງພຣະເຈົ້າຊຶ່ງບໍ່ອາດເຮັດໃຫ້ຫວັ່ນໄຫວໄດ້,
ໃຫ້ພວກເຮົາຂອບພຣະຄຸນແລະນະມັດສະການພຣະເຈົ້າຕາມນ້ຳພຣະທັຍ ດ້ວຍຄວາມເຄົາຣົບຢຳເກງ.[29]ເພາະພຣະເຈົ້າຂອງພວກເຮົາ
ຊົງເປັນໄຟທີ່ເຜົາຜານ.

 generated on Tue Jun 17 19:01:42 2025

13 1ຂໍໃຫ້ດຳເນີນຕໍ່ໄປໃນຄວາມຮັກຢ່າງພີ່ນ້ອງ2ຢ່າລືມໃຫ້ການຕ້ອນຮັບຄົນແປກ ຫນ້າເພາະດ້ວຍການເຮັດເຊັ່ນນີ້ບາງຄົນກໍໄດ້ຕ້ອນຮັບ
ເທວະດາຢ່າງບໍ່ຮູ້ຕົວ.

3ຈົ່ງຣະນຶກເຖິງຜູ້ທີ່ຖືກລ່າມໂສ້ ເຫມືອນກັບວ່າ ພວກເຈົ້າ ກໍຖືກລ່າມໂສ້ ເຫມືອນກັບ ພວກເຂົາ. ຈົ່ງຣະນຶກເຖິງຄົນເຫລົ່ານັ້ນທີ່ຖືກຂົ່ມເຫັງ,
ເຫມືອນກັບວ່າຮ່າງກາຍຂອງພວກທ່ານກໍຖືກຂົ່ມເຫັງເຫມືອນກັນກັບພວກເຂົາດ້ວຍ.
4ໃຫ້ທຸກຄົນເຄົາຣົບໃຫ້ກຽດການແຕ່ງງານໃຫ້ຕຽງແຕ່ງງານພວກເຈົ້າບໍຣິສຸດເພາະ ພຣະເຈົ້າຈະຕັດສິນລົງໂທດຄົນເຮັດຜິດສິນທັມທາງເພດ
ແລະຄົນຫລິ້ນຊູ້.
5ຈົ່ງໃຫ້ການດຳເນີນຊີວິດຂອງພວກທ່ານເປັນອິສຣະ ຈາກການຮັກເງິນຄຳ. ຈົ່ງພໍໃຈໃນສິ່ງຕ່າງໆທີ່ຕົນມີຢູ່,
ເພາະພຣະເຈົ້າເອງໄດ້ກ່າວເອົາໄວ້ວ່າ, “ເຮົາຈະບໍ່ປະຖິ້ມເຈົ້າ ຫລື
ຖິ້ມເຈົ້າເສັຽຈັກເທື່ອ.”6ຂໍໃຫ້ພວກເຮົາມີຄວາມພໍໃຈເພື່ອພວກເຮົາຈະກ່າວດ້ວຍຄວາມກ້າໄດ້ວ່າ,
“ອົງພຣະຜູ້ເປັນເຈົ້າເປັນຜູ້ປຣະທານຄວາມຊ່ວຍເຫລືອແກ່ຂ້າພຣະເຈົ້າ. ຂ້າພຣະເຈົ້າຈະບໍ່ຢ້ານກົວ. ມະນຸດຈະເຮັດຫຍັງໃຫ້ຂ້າພຣະເຈົ້າໄດ້?”
7ຈົ່ງເຄົາຣົບບັນດາຜູ້ນຳຂອງພວກທ່ານ, ຄືຜູ້ທີ່ປະກາດພຣະທັມຂອງພຣະເຈົ້າ, ໃຫ້ແກ່ພວກທ່ານ ແລະ ຈົ່ງພິຈາຣະນາ
ເບິ່ງຜົນຈາກການປະຕິບັດຂອງພວກເພິ່ນ ແລະ ຈົ່ງປະຕິບັດຕາມແບບຂອງພວກເພິ່ນ.8ພຣະເຢຊູຄຣິດເຈົ້າ ຊົງເປັນເຫມືອນເດີມ ໃນເວລາວານນີ້,
ວັນນີ້ ແລະຕະຫລອດໄປເປັນນິດ.
9ຢ່າຫລົງໄປກັບຄຳສອນແປກໆທີ່ມີຫລວງຫລາຍເພາະເປັນສິ່ງທີ່ດີທີ່ຈິດໃຈສົມຄວນໄດ້ຮັບການເສີມກຳລັງດ້ວຍ ພຣະຄຸນ,
ບໍ່ແມ່ນດ້ວຍກົດຕ່າງໆເລື່ອງອາຫານການກິນ
ຊຶ່ງບໍ່ໄດ້ຊ່ວຍຜູ້ຄົນເຫລົ່ານັ້ນທີ່ດຳເນີນດ້ວຍສິ່ງນີ້ເລີຍ10ພວກເຮົາມີແທ່ນບູຊາທີ່ບັນດາຄົນເຫລົ່ານັ້ນປະຕິບັດຢູ່ໃນຫໍເຕັນສັກສິດນັ້ນ
ບໍ່ມີສິດທີ່ຈະຮັບປະທານ11ເພາະເລືອດຂອງສັດທີ່ຖືກຂ້າເພື່ອລ້າງບາບນັ້ນຖືກນຳເຂົ້າໄປໃນສະຖານທີ່ສັກສິດທີ່ສຸດ,
ໂດຍປະໂລຫິດໃນຂະນະທີ່ຊາກຂອງສັດເຫລົ່ານັ້ນກໍຖືກນຳອອກໄປເຜົານອກຄ້າຍ.
12ດັ່ງນັ້ນພຣະເຢຊູເຈົ້າຈຶ່ງທົນທຸກຂໍຢູ່ພາຍນອກປະຕູເມືອງດ້ວຍ, ເພື່ອເປັນການຖວາຍຜູ້ຄົນໂດຍຜ່ານທາງເລືອດຂອງພຣະອົງເອງ.13ດ້ວຍເຫດນີ້
ໃຫ້ພວກເຮົາໄປ ຫາພຣະອົງທີ່ນອກຄ້າຍ ແລະແບກຮັບຄວາມອັບອາຍຂອງພຣະອົງ14ເພາະພວກເຮົາບໍ່ມີນະຄອນອັນຖາວອນທີ່ນີ້ແຕ່ພວກເຮົາ
ກຳລັງລໍຄອຍນະຄອນຫນຶ່ງທີ່ຈະມາໃນພາຍຫນ້າ.
15ໂດຍຜ່ານທາງພຣະອົງ, ຈຶ່ງຂໍໃຫ້, ພວກເຮົາຖວາຍເຄື່ອງບູຊາແຫ່ງການສັນຣະເສີນແກ່ພຣະເຈົ້າສະເຫມີ,
ຄຳສັນຣະເສີນທີ່ອອກມາຈາກສົບປາກຂອງພວກເຮົາຊຶ່ງຍອມຮັບພຣະນາມຂອງພຣະອົງ.16ແລະຢ່າໃຫ້ເຮົາຫລົງລືມ ການເຮັດຄວາມດີ ແລະ
ຊ່ວຍເຫລືອຊຶ່ງກັນ ແລະກັນ ເພາະເຄື່ອງບູຊາຢ່າງນີ້ທີ່ເຮັດໃຫ້ພຣະເຈົ້າພໍພຣະທັຍຫລາຍ.17ຈົ່ງເຊື່ອຟັງ
ແລະຍອມຢູ່ພາຍໃຕ້ບັນດາຜູ້ນຳຂອງພວກທ່ານ ເພາະພວກເພິ່ນດູແລ ຮັກສາຈິດວິນຍານຂອງພວກທ່ານຢູ່ ເຫມືອນຜູ້ທີ່ຈະຕ້ອງກ່າວລາຍງານ
ຈົ່ງເຊື່ອຟັງເພື່ອພວກເພິ່ນ ຈະເຮັດສິ່ງນີ້ດ້ວຍຄວາມຊື່ນຊົມຍິນດີ, ບໍ່ແມ່ນດ້ວຍຄວາມເສົ້າໃຈ, ຊຶ່ງຈະບໍ່ເປັນປະໂຫຍດອັນໃດແກ່ເຈົ້າທັງຫລາຍ.
18ຈົ່ງພາວັນນາອະທິຖານ ເພື່ອພວກເຮົາ ເພາະພວກເຮົາຫມັ້ນໃຈວ່າ ພວກເຮົາມີຈິດສຳນຶກທີ່ບໍຣິສຸດແລະພວກເຮົາປາຖນາທີ່ຈະ
ໃຊ້ຊີວິດຕາມຢ່າງຖືກຕ້ອງໃນທຸກສິ່ງ.19ຫລາຍຂຶ້ນ ເພື່ອຂ້າພຣະເຈົ້າຈະກັບມາຫາພວກທ່ານໄວໆນີ້.
20ຂໍພຣະເຈົ້າ ແຫ່ງສັນຕິສຸກ, ຜູ້ຊົງນຳ ໃຫ້ພຣະຜູ້ລຽ້ງແກະທີ່ຍິ່ງໃຫຍ່ຄືອົງພຣະເຢຊູຄຣິດເຈົ້າຟື້ນຄືນມາຈາກຄວາມຕາຍ.
ໂດຍທາງພຣະໂລຫິດ ແຫ່ງພັນທະສັນຍານິຣັນດອນນັ້ນ,21ຊົງກະທຳ ໃຫ້ພວກທ່ານສົມບູນພ້ອມດ້ວຍສິ່ງດີທຸກຢ່າງ. ເພື່ອຈະປະຕິບັດ
ຕາມນ້ຳພຣະທັຍຂອງພຣະອົງ ຂໍພຣະອົງທຳງານຢູ່ພາຍໃນພວກເຮົາຕາມຊອບພຣະທັຍໂດຍຜ່ານທາງ ພຣະເຢຊູຄຣິດເຈົ້າ.
ຜູ້ຊຶ່ງໄດ້ຮັບສະຫງ່າຣາສີສືບໆໄປ ເປັນນິດ ອາແມນ.
22ພີ່ນ້ອງທັງຫລາຍ, ຂ້າພຣະເຈົ້າຫນູນໃຈໃຫ້ພວກເຈົ້າອົດທົນຮັບຖ້ອຍຄຳແຫ່ງການຫນູນນ້ຳໃຈທີ່ຂ້າພຣະເຈົ້າໄດ້ຂຽນມາເຖິງທ່ານສັ້ນໆນີ້.
23ຂໍໃຫ້ພວກທ່ານຮູ້ເຖິງວ່າ ຕີໂມທຽວນ້ອງຊາຍ ຂອງພວກເຮົາໄດ້ອອກຈາກຄຸກແລ້ວ, ຖ້າລາວມາຮອດທີ່ນີ້ໄວ,
ຂ້າພຣະເຈົ້າກໍຈະໄປພົບພວກທ່ານພ້ອມກັບເຂົາ.
24ເຮົາ ຂໍຝາກຄວາມຄິດເຖິງ ມາຍັງບັນດາຜູ້ນຳ ຂອງພວກທ່ານ ແລະບັນດາຜູ້ເຊື່ອທັງຫມົດ ບັນດາພີ່ນ້ອງທີ່ມາຈາກອີຕາລີ ກໍຝາກ
ຄວາມຄິດເຖິງມາຍັງພວກທ່ານ ດ້ວຍ.25ຂໍໃຫ້ພຣະຄຸນຈົ່ງສະຖິດ ຢູ່ ກັບພວກທ່ານທຸກຄົນເຖີ້ນ ອາແມນ.

# ຢາໂກໂບ

1 1ຢາໂກໂບ, ຜູ້ຮັບໃຊ້ຂອງພຣະເຈົ້າ ແລະ ຂອງອົງພຣະເຢຊູຄຣິດເຈົ້າ, ທັກທາຍ ເຖິງຄົນສິບສອງ
ຕະກຸນທີ່ກະຈັດກະຈາຍຢູ່ນັ້ນ2ຈົ່ງຖືວ່າເປັນເລື່ອງທີ່ຫນ້າຍິນດີທັງຫມົດ, ອ້າຍນ້ອງຂອງເຮົາເອີຍ, ເມື່ອພວກເຈົ້າພົບການທົດລອງຕ່າງໆ.
3ພວກເຈົ້າຮູ້ວ່າ ການຖືກທົດລອງ ຕໍ່ກັບຄວາມເຊື່ອຂອງພວກເຈົ້າ ກໍເຮັດໃຫ້ເກີດມີຄວາມພຽນອົດທົນ.

4ຈົ່ງໃຫ້ຄວາມພຽນອົດທົນ ຂອງພວກເຈົ້າ ນັ້ນສຳເລັດຜົນ, ເພື່ອວ່າພວກເຈົ້າຈະໄດ້ກາຍເປັນຄົນທີ່ສຳເລັດ ແລະ ຄົບຖ້ວນທຸກປະການ,
ໂດຍບໍ່ຂາດເຂີນສິ່ງໃດ.5ແຕ່ຖ້າຄົນໃດໃນພວກເຈົ້າ ຂາດສະຕິປັນຍາ, ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ,
ຜູ້ຊົງໂຜດປຣະທານໃຫ້ແກ່ຄົນທັງປວງດ້ວຍພຣະ ກະຣຸນາ ໂດຍຊົງບໍ່ກ່າວຕິຕຽນແກ່ຜູ້ທີ່ທູນຂໍ, ແລະ
ພຣະອົງກໍຈະປຣະທານສິ່ງທັງປວງເຫລົ່ານັ້ນໃຫ້.
6ແຕ່ໃຫ້ຜູ້ນັ້ນທູນຂໍດ້ວຍຄວາມເຊື່ອ, ຢ່າໃຫ້ ມີໃຈສົງໃສສິ່ງໃດ. ເພາະຜູ້ທີ່ສົງໃສນັ້ນເປັນ ເຫມືອນຟອງນ້ຳທີ່ຖືກລົມພັດຊັດໄປມາ.
7ຢ່າໃຫ້ຜູ້ນັ້ນຄິດວ່າຕົນຈະໄດ້ຮັບສິ່ງໃດຈາກອົງພຣະຜູ້ເປັນເຈົ້າ.8ເພາະເປັນຄົນສອງໃຈບໍ່ແນ່ນອນ ໃນທຸກສິ່ງທີ່ຕົນກະທຳ.
9ໃຫ້ພີ່ນ້ອງທີ່ຕ່ຳຕ້ອຍ ຈົ່ງອວດອ້າງໃນການ ທີ່ພຣະເຈົ້າຊົງຍົກຍໍຕົວຂຶ້ນ,10ແຕ່ໃຫ້ຄົນ ຮັ່ງມີຈົ່ງອວດອ້າງ ໃນການທີ່ພຣະເຈົ້າຊົງໃຫ້ ຕົກຕ່ຳລົງ,
ເພາະວ່າຕົນຈະຕ້ອງລ່ວງລັບໄປ ເຫມືອນດັ່ງດອກຫຍ້າ.11ເພາະເມື່ອຕາເວັນ ຂຶ້ນຄວາມຮ້ອນອັນແຮງກ້າ ແລະ


generated on Tue Jun 17 19:01:42 2025

ເຮັດໃຫ້ຕົ້ນຫຍ້າຫ່ຽວແຫ້ງໄປແລ້ວ. ດອກຫຍ້າກໍຕົກຫລົ່ນລົງ, ແລະ ແລ້ວຄວາມງາມຂອງມັນກໍສູນສິ້ນໄປ. ໃນທຳນອງດຽວກັນ, ຄົນຮັ່ງມີ
ຈະເສື່ອມສູນໄປໃນ ຂະນະທີ່ດຳເນີນງານຂອງຕົນເຫມືອນກັນ.
[12]ພຣະພອນກໍເປັນຂອງຄົນທີ່ພຽນອົດທົນຕໍ່ ການທົດລອງ. ເພາະເມື່ອຜູ້ນັ້ນທົນໄດ້ແລ້ວ, ເຂົາກໍຈະໄດ້ຮັບມົງກຸດແຫ່ງຊີວິດ, ຊຶ່ງພຣະເຈົ້າໄດ້ຊົງ
ສັນຍາໄວ້ແກ່ຄົນທັງຫລາຍທີ່ຮັກພຣະອົງ.[13]ເມື່ອຜູ້ໃດຖືກລໍ້ລວງໃຫ້ຫລົງ ຢ່າໃຫ້ຜູ້ນັ້ນເວົ້າ ວ່າ, “ພຣະເຈົ້າຊົງລໍ້ລວງຂ້າພຣະເຈົ້າໃຫ້ຫລົງ”
ເພາະວ່າຄວາມຊົ່ວຈະມາທົດລອງພຣະເຈົ້າໃຫ້ຫລົງບໍ່ໄດ້ ແລະ ພຣະອົງເອງກໍບໍ່ຊົງທົດລອງຜູ້ໃດໃຫ້ຫລົງຈັກເທື່ອ.
[14]ແຕ່ວ່າທຸກຄົນທີ່ຖືກທົດລອງໃຫ້ຫລົງ ກໍຍ້ອນຄວາມປາຖນາຂອງເຂົາເອງ, ຊຶ່ງຊັກຈູງ ແລະ ຫລອກລວງເຂົາໃຫ້ປະຕິບັດຕາມ.
[15]ເມື່ອຄວາມປາຖນາຊົ່ວຕັ້ງຮາກແລ້ວ, ກໍໃຫ້ ເກີດມີຄວາມຜິດບາບ, ແລະ ເມື່ອຄວາມຜິດບາບໃຫຍ່ຂຶ້ນເຕັມທີ່ແລ້ວ, ກໍໃຫ້ເກີດມີຄວາມຕາຍ.
[16]ພີ່ນ້ອງທີ່ຮັກແພງຂອງເຮົາເອີຍ, ຢ່າໄດ້ຫລົງຜິດໄປເລີຍ.
[17]ຂອງປະທານອັນດີທຸກຢ່າງ ແລະ ຂອງຂວັນອັນປະເສີດທຸກປະການ ຍ່ອມມາຈາກທາງ ເທິງ. ສິ່ງເຫລົ່ານັ້ນລົງມາຈາກພຣະບິດາເຈົ້າແຫ່ງ
ຄວາມສະຫວ່າງ. ໃນພຣະບິດາເຈົ້ານັ້ນບໍ່ມີການ ປ່ຽນແປງ ແລະ ບໍ່ມີເງົາເນື່ອງຈາກການຫມູນວຽນ.
[18]ພຣະອົງຈຶ່ງຊົງບັນດານໃຫ້ພວກເຮົາບັງເກີດດ້ວຍພຣະທັມອັນສັດຈິງ, ເພື່ອພວກເຮົາ ຈະເປັນຢ່າງຜົນທຳອິດ ແຫ່ງສິ່ງທັງຫລາຍທີ່
ພຣະອົງໄດ້ຊົງສ້າງ.
[19]ພີ່ນ້ອງທີ່ຮັກເອີຍ, ຈົ່ງຈົດຈຳຂໍ້ນີ້ໄວ້ຄື: ໃຫ້ທຸກຄົນວ່ອງໄວໃນການຟັງ, ຊ້າໃນການເວົ້າ, ຊ້າໃນການຮ້າຍ.
[20]ເພາະຄວາມຮ້າຍຂອງມະນຸດບໍ່ໄດ້ເຮັດໃຫ້ ຄວາມຍຸດຕິທັມ ຂອງພຣະເຈົ້າເກີດມາ.[21]ເຫດສະນັ້ນ ຈົ່ງເລີກ ຈາກຄວາມຊົ່ວມົວໝອງທຸກຢ່າງ
ແລະ ຄວາມຊົ່ວຮ້າຍອັນເຫລືອຫລາຍ. ຈົ່ງນ້ອມໃຈຮັບເອົາ ພຣະທັມທີ່ປູກຝັງໄວ້ແລ້ວນັ້ນ, ຊຶ່ງສາມາດຊ່ວຍ
ຈິດວິນຍານຂອງພວກເຈົ້າໃຫ້ພົ້ນໄດ້.
[22]ຈົ່ງເປັນຜູ້ປະຕິບັດຕາມພຣະທັມນັ້ນ ແລະຢ່າເປັນພຽງຜູ້ຟັງ, ພຽງແຕ່ຫລອກລວງຕົວທ່ານເອງເທົ່ານັ້ນ.[23]ສຳລັບຜູ້ໃດ ທີ່ເປັນຜູ້ຟັງພຣະທັມແລ້ວ
ແຕ່ບໍ່ເປັນຜູ້ເຮັດຕາມ, ລາວກໍເປັນດັ່ງຄົນທີ່ແຍງແວ່ນ ເບິ່ງເຫັນຫນ້າຂອງຕົນເອງຕາມທັມະຊາດ.[24]ເຂົາແຍງເບິ່ງຕົນເອງ ແລ້ວກໍອອກໄປແລ້ວ
ແລະ ກໍລືມໃນທັນທີນັ້ນ ໂລດວ່າຕົນເອງໄດ້ເປັນຄືຢ່າງໃດ.[25]ແຕ່ຜູ້ໃດທີ່ພິຈາຣະນາເບິ່ງຢ່າງຣະມັດຣະວັງໃນກົດບັນຍັດ
ອັນຄົບຖ້ວນແຫ່ງອິສຣະພາບນັ້ນ, ແລະ ສືບຕໍ່ປະຕິບັດຕາມ ຕັ້ງຫມັ້ນຄົງຢູ່ໃນກົດບັນຍັດຂອງພຣະເຈົ້າ,
ບໍ່ແມ່ນພຽງແຕ່ເປັນຜູ້ທີ່ໄດ້ຍິນແລ້ວລືມໄປ, ຄົນນັ້ນແຫລະຈະໄດ້ຮັບພຣະພອນຈາກພຣະເຈົ້າ ໃນສິ່ງທີ່ເຂົາກະທຳ.
[26]ຖ້າຜູ້ໃດຄິດວ່າຕົນເປັນຄົນມີສາສນາ, ແຕ່ບໍ່ໄດ້ຫ້າມລີ້ນຂອງຕົນ, ຜູ້ນັ້ນກໍຫລອກລວງ ໃຈຕົນເອງເທົ່ານັ້ນ,
ແລ້ວສາສນາຂອງຜູ້ນັ້ນກໍບໍ່ມີປະໂຫຍດຫມົດ.[27]ສາສນາທີ່ບໍຣິສຸດ ແລະ ບໍ່ມີການຊົ່ວມົວຫມອງ ຕໍ່ພຣະພັກພຣະເຈົ້າຜູ້ຊົງເປັນ
ພຣະບິດາເຈົ້າກໍມີດັ່ງນີ້ຄື: ເພື່ອຊ່ວຍເຫລືອລູກກຳພ້າ ແລະ ຍິງຫມ້າຍທີ່ມີຄວາມທຸກຮ້ອນລຳບາກ, ແລະ
ການຮັກສາຕົວໃຫ້ພົ້ນຈາກການຊົ່ວມົວຫມອງຂອງທາງໂລກ.

2 [1]ອ້າຍນ້ອງຂອງເຮົາເອີຍ, ຢ່າໄດ້ຍຶດຖືຄວາມເຊື່ອໃນອົງພຣະເຢຊູຄຣິດເຈົ້າ ພຣະເຈົ້າຂອງເຮົາ, ຜູ້ຊົງສະຫງ່າຣາສີນັ້ນ,
ດ້ວຍຄວາມລຳອຽງເລືອກຫນ້າຄົນ.[2]ຫາກມີຄົນຫນຶ່ງເຂົ້າມາໃນທີ່ປະຊຸມຂອງພວກເຈົ້າ ຖືແຫວນຄຳ ແລະ ແຕ່ງຕົວງົດງາມ, ແລະ
ກໍມີຄົນທຸກຈົນຜູ້ຫນຶ່ງ ນຸ່ງເຄື່ອງເປື້ອນເປິເຂົ້າມາເຫມືອນກັນ.[3]ຖ້າພວກເຈົ້າ ຈະສົນໃຈເບິ່ງ ແຕ່ຄົນທີ່ແຕ່ງຕົວດີນັ້ນ ແລະ ທັງທັກທາຍປາໄສວ່າ,
"ເຊີນນັ່ງບ່ອນ ເຫມາະສົມນີ້ເຖີ້ນ," ແລະ ແຕ່ເຈົ້າກ່າວແກ່ຄົນ ທຸກຈົນນັ້ນວ່າ, "ໃຫ້ເຈົ້າຢືນຢູ່ຫັ້ນ," ຫລື "ໃຫ້
ເຈົ້ານັ່ງທີ່ໃກ້ຕີນເຮົານີ້."[4]ຖ້າເຮັດດັ່ງນັ້ນພວກເຈົ້າເປັນຜູ້ແບ່ງຊັ້ນວັນນະ ແລະ ກາຍເປັນຜູ້ຕັດສິນຄົນດ້ວຍຄວາມຄິດອັນຊົ່ວບໍ່ແມ່ນບໍ?

[5]ຈົ່ງຟັງເຖີ້ນ, ພີ່ນ້ອງທີ່ຮັກຂອງເຮົາເອີຍ, ພຣະເຈົ້າໄດ້ຊົງເລືອກເອົາຄົນທຸກຈົນ ໃນໂລກນີ້ ໃຫ້ເປັນຄົນຮັ່ງມີຝ່າຍຄວາມເຊື່ອ ແລະ
ໃຫ້ເປັນຜູ້ຮັບມໍຣະດົກໃນຣາຊະອານາຈັກ ທີ່ພຣະອົງຊົງໄດ້ສັນຍາໄວ້ສຳລັບຄົນທີ່ຮັກພຣະອົງບໍ່ແມ່ນບໍ?
[6]ແຕ່ພວກເຈົ້າໄດ້ຫມິ່ນປະຫມາດຄົນທຸກຈົນ! ແມ່ນຜູ້ໃດທີ່ໄດ້ກົດຂີ່ພວກເຈົ້າ ແລະ ຈັບພວກເຈົ້າຂຶ້ນສານຄັນບໍ່ແມ່ນຄົນຮັ່ງມີນັ້ນບໍ?
[7]ບໍ່ແມ່ນພວກເຂົານັ້ນ ຫລື ທີ່ເວົ້າຫມິ່ນປະຫມາດ ຕໍ່ພຣະນາມອັນປະເສີດຊຶ່ງພວກເຈົ້າກໍເປັນຂອງພຣະອົງ?
[8]ເຖິງແນວໃດກໍຕາມ, ຖ້າເຈົ້າທັງຫລາຍເຮັດ ຕາມພຣະຣາຊະບັນຍັດ, ໂດຍຄົບຖ້ວນຕາມພຣະຄັມພີຂໍ້ທີ່ວ່າ, "ເຈົ້າຈະຮັກເພື່ອນບ້ານ ເຫມືອນ
ຮັກຕົນເອງ." ພວກເຈົ້າກໍເຮັດຖືກຕ້ອງແລ້ວ.[9]ແຕ່ຖ້າພວກເຈົ້າເລືອກຊັ້ນວັນນະຄົນ, ພວກເຈົ້າ ກໍກຳລັງເຮັດຜິດບາບ ແລະ ກົດບັນຍັດກໍລົງໂທດ
ພວກເຈົ້າໃນຖານເປັນຜູ້ຝ່າຝືນກົດບັນຍັດ.
[10]ສຳລັບຜູ້ໃດທີ່ເຊື່ອຟັງກົດບັນຍັດທັງຫມົດ, ຫາກເວັ້ນແຕ່ຝ່າຝືນ ກົດບັນຍັດຂໍ້ໃດຂໍ້ຫນຶ່ງກໍຕາມ, ຜູ້ນັ້ນກໍຜິດໃນຖານຝ່າຝືນກົດບັນຍັດທັງຫມົດ.
[11]ດ້ວຍວ່າ, ພຣະອົງຜູ້ທີ່ກ່າວວ່າ, "ຢ່າ ຫລິ້ນຊູ້ສູ່ຜົວເມຍ", ກໍຍັງຊົງກ່າວອີກວ່າ, "ຢ່າຂ້າ ຄົນ." ຖ້າວ່າເຈົ້າບໍ່ໄດ້ຫລິ້ນຊູ້ສູ່ຜົວເມັຍ ແຕ່ໄດ້ຂ້າຄົນ,
ເຈົ້າກໍກາຍເປັນຜູ້ທີ່ຝ່າຝືນກົດບັນຍັດແລ້ວ.
[12]ເຈົ້າທັງຫລາຍຈົ່ງເວົ້າ ແລະ ເຮັດເຫມືອນ ຢ່າງຄົນທີ່ກຳລັງຈະໄດ້ຮັບການພິພາກສາດ້ວຍ ກົດແຫ່ງເສຣີພາບ.[13]ເພາະວ່າໃນການພິພາກສາ
ທີ່ປາສະຈາກຄວາມເມດຕາ ຕໍ່ຜູ້ທີ່ບໍ່ໄດ້ ສະແດງຄວາມເມດຕາ. ຄວາມເມດຕາຍ່ອມມີຊັຍຊະນະເຫນືອ ການພິພາກສາ.
[14]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຖ້າຄົນ ຫນຶ່ງເວົ້າວ່າຕົນມີຄວາມເຊື່ອ, ແຕ່ບໍ່ມີການ ປະຕິບັດ ກໍຈະມີປະໂຫຍດຫຍັງເດ? ຄວາມເຊື່ອ ແບບນັ້ນ
ຈະເຮັດໃຫ້ລາວພົ້ນໄດ້ບໍ?[15]ຖ້າພີ່ນ້ອງຊາຍ-ຍິງຄົນໃດ ບໍ່ມີເຄື່ອງນຸ່ງຫົ່ມ ແລະ ຂາດເຂີນອາຫານປະຈຳວັນ.[16]ຫາກມີຄົນ
ໃດໃນພວກເຈົ້າເວົ້າແກ່ເຂົາວ່າ, "ຈົ່ງໄປເປັນສຸກ ເຖີ້ນ, ຂໍໃຫ້ອົບອຸ່ນ ແລະ ກິນອີ່ມ," ແຕ່ບໍ່ໄດ້ໃຫ້ສິ່ງຂອງທີ່ເຂົາຕ້ອງການ ສຳລັບຕົວນັ້ນຈະເປັນ
ປະໂຫຍດອັນໃດ?[17]ໃນທາງດຽວກັນ, ຄວາມເຊື່ອຢ່າງດຽວກັນ, ຖ້າບໍ່ມີການປະຕິບັດກໍ ຕາຍແລ້ວ.
[18]ແຕ່ບາງຄົນອາດຈະເວົ້າວ່າ, "ຝ່າຍເຈົ້າມີ ຄວາມເຊື່ອ, ແລະ ຝ່າຍຂ້ອຍມີການປະຕິບັດ." ຈົ່ງສະແດງໃຫ້ເຮົາເຫັນຄວາມເຊື່ອຂອງເຈົ້າ
ຊຶ່ງບໍ່ມີການປະຕິບັດ, ແລະ ຝ່າຍເຮົາຈະສະແດງໃຫ້ເຈົ້າເຫັນຄວາມເຊື່ອຂອງເຮົາດ້ວຍການປະຕິບັດຂອງເຮົານັ້ນ.
[19]ຝ່າຍພວກເຈົ້າທີ່ເຊື່ອວ່າມີພຣະເຈົ້າແຕ່ອົງດຽວນັ້ນກໍດີຢູ່ແລ້ວ; ສ່ວນພວກຜີມານຮ້າຍກໍເຊື່ອເຫມືອນກັນ ແລະ ມັນກໍຢ້ານຈົນຕົວສັ່ນ.[20]ເຈົ້າຮູ້ບໍ
ຄົນໂງ່ເອີຍ, ວ່າຄວາມເຊື່ອທີ່ບໍ່ມີການປະຕິບັດນັ້ນກໍບໍ່ມີຜົນປະໂຫຍດຫຍັງເລີຍ?
[21]ອັບຣາຮາມ ບິດາຂອງພວກເຮົາຖືກຍອມຮັບວ່າເປັນຄົນຊອບທັມ ກໍໂດຍການກະທຳຂອງເພິ່ນ ເມື່ອເພິ່ນຖວາຍອີຊາກ
ລູກຊາຍຂອງເພິ່ນເທິງແທ່ນບູຊາບໍ່ແມ່ນບໍ?[22]ເຈົ້າກໍເຫັນແລ້ວວ່າຄວາມເຊື່ອ ກັບການ ປະຕິບັດຂອງເພິ່ນກໍໄປຄວບຄູ່ກັນ, ແລະ
ຄວາມເຊື່ອຂອງເພິ່ນຖືກເຮັດໃຫ້ດີຄົບຖ້ວນໄດ້ກໍໂດຍ ການປະຕິບັດ,[23]ພຣະຄັມພີກໍໄດ້ເຮັດໃຫ້ສຳເລັດ ໂດຍທີ່ມີຄຳຂຽນໄວ້ວ່າ,
"ອັບຣາຮາມໄດ້ເຊື່ອ ພຣະເຈົ້າ ແລະ ຍ້ອນຄວາມເຊື່ອນັ້ນ ພຣະອົງຈຶ່ງ ຊົງຮັບວ່າເພິ່ນເປັນຄົນຊອບທັມ," ແລະ ພຣະອົງຈຶ່ງເອີ້ນອັບຣາຮາມວ່າ
ແມ່ນສະຫາຍຂອງພຣະເຈົ້າ.[24]ທ່ານເຫັນວ່າ ດ້ວຍການປະຕິບັດ ຊຶ່ງຖືໄດ້ວ່າ ເປັນຄົນຊອບທັມ, ແລະ
ບໍ່ແມ່ນດ້ວຍຄວາມເຊື່ອພຽງຢ່າງດຽວເທົ່ານັ້ນ.
[25]ໃນທາງດຽວກັນ, ນາງຣາຮາບ ຍິງໂສເພນີ ກໍໄດ້ຖືວ່າຊອບທັມເນື່ອງດ້ວຍການປະຕິບັດບໍ່ແມ່ນບໍ, ເມື່ອນາງໄດ້ຮັບຕ້ອນຜູ້ສື່ຂ່າວ
ແລ້ວໃຫ້ພວກເພິ່ນກັບເມືອທາງອື່ນ?[26]ເຫດວ່າຮ່າງກາຍທີ່ບໍ່ມີຈິດວິນຍານກໍຕາຍແລ້ວສັນໃດ, ຄວາມເຊື່ອທີ່ບໍ່ມີການປະຕິບັດ
ກໍຕາຍແລ້ວສັນນັ້ນເຫມືອນກັນ.

 generated on Tue Jun 17 19:01:42 2025

3 [1]ພີ່ນ້ອງຂອງເຮົາເອີຍ, ບໍ່ແມ່ນຫລາຍຄົນຄວນຈະເປັນອາຈານ. ພວກເຮົາກໍຮູ້ແລ້ວວ່າ ພວກເຮົາຈະໄດ້ຮັບການ
ຊົງພິພາກສາຫນັກຫນ່ວງກວ່າຜູ້ອື່ນ.[2]ສຳລັບພວກເຮົາທຸກຄົນເຮັດຜິດພາດຢູ່ເລື້ອຍໆ. ຖ້າຜູ້ໃດບໍ່ໄດ້ເຮັດຜິດທາງວາຈາ,
ຜູ້ນັ້ນກໍເປັນຄົນດີຄົບຖ້ວນ, ສາມາດບັງຄັບທັງຕົວໄວ້ໄດ້ເຫມືອນກັນ.

[3]ບັດນີ້ຖ້າພວກເຮົາເອົາບັງຫຽນໃສ່ປາກມ້າເພື່ອ ໃຫ້ມັນຟັງຄວາມພວກເຮົາ, ພວກເຮົາກໍສາມາດ
ບັງຄັບມ້າທັງໂຕໃຫ້ມັນໄປຕາມທິດທາງທີ່ຕ້ອງການໄດ້.[4]ເຮືອກໍເຫມືອນກັນ, ເຖິງວ່າຈະລຳໃຫຍ່ພຽງໃດກໍຕາມ ກໍເຄື່ອນທີ່ໄປຕາມລົມແຮງ,
ພັດມັນກໍຍັງຫັນໄປມາ ໂດຍອາໄສໄມ້ຂັດທ້າຍເຮືອອັນນ້ອຍໆ ຕາມຄວາມຕ້ອງການຂອງນາຍທ້າຍເຮືອ.
[5]ລີ້ນກໍຄືກັນ ເຖິງເປັນອະວັຍະວະສ່ວນ ນ້ອຍໆຂອງຮ່າງກາຍ, ແຕ່ສາມາດໂອ້ອວດເຖິງເລື່ອງໃຫຍ່ໆໄດ້. ແປວໄຟພຽງເລັກນ້ອຍ
ກໍຍັງສາມາດເຜົາຜານປ່າໄມ້ໃຫຍ່ໄດ້.[6]ລີ້ນກໍ ເປັນດັ່ງໄຟ, ມັນເປັນຄືໂຣກແຫ່ງ ຄວາມຊົ່ວຮ້າຍທີ່ຄອບຄອງຢູ່ໃນຮ່າງກາຍຂອງພວກເຮົາ.
ແລະເຮັດໃຫ້ເປື້ອນເປິໄປທົ່ວທັງຮ່າງກາຍ, ແລະ ມັນເປັນເຊື້ອໄຟທີ່ເຜົາໄຫມ້ຊີວິດ. ມັນເອງກໍເປັນໄຟມາຈາກນະຮົກ.
[7]ສຳລັບສັດທຸກໆຊະນິດ ບໍ່ວ່າສັດປ່າ, ນົກແລະ ສັດເລືອຄານ ແລະ ສັດນ້ຳ ມະນຸດສາມາດຝຶກແອບທັງຫມົດໄດ້.[8]ແຕ່ສຳລັບລີ້ນແລ້ວ,
ບໍ່ມີຜູ້ໃດສາມາດຝຶກແອບໄດ້. ມັນເປັນຄວາມຊົ່ວທີ່ ບໍ່ສາມາດຈະບັງຄັບໄດ້, ເຕັມໄປດ້ວຍພິດຮ້າຍທີ່ເຖິງແກ່ຄວາມຕາຍ.
[9]ພວກເຮົາໃຊ້ລີ້ນສັນຣະເສີນອົງພຣະຜູ້ເປັນເຈົ້າຄືພຣະບິດາເຈົ້າ, ແລະ ທັງໃຊ້ລີ້ນປ້ອຍດ່າເພື່ອນມະນຸດດ້ວຍກັນ,
ຜູ້ທີ່ພຣະເຈົ້າໄດ້ຊົງສ້າງຕາມພຣະລັກສະນະຂອງພຣະອົງ.[10]ອອກ ມາຈາກປາກອັນດຽວກັນ ກ່າວເປັນຄຳສັນຣະເສີນ ແລະ
ຄຳປ້ອຍດ່າຊາບແຊ່ງ. ອ້າຍນ້ອງທັງຫລາຍ ຂອງເຮົາເອີຍ, ສິ່ງເຫລົ່ານີ້ບໍ່ຄວນໃຫ້ເກີດຂຶ້ນເປັນ ຢ່າງນີ້ເລີຍ.
[11]ບໍ່ນ້ຳພຸຈະໃຫ້ທັງນ້ຳຫວານ ແລະ ນ້ຳຂົມພຸ່ງອອກມາຈາກຮູດຽວກັນບໍ?[12]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຕົ້ນເດື່ອເທດ
ຈະເກີດຜົນເປັນຫມາກກອກໄດ້ບໍ? ຫລື ເຄືອອະງຸ່ນຈະເກີດຜົນເປັນຫມາກເດື່ອເທດໄດ້ບໍ? ດັ່ງນັ້ນນ້ຳເຄັມຈະເຮັດເປັນນ້ຳຫວານກໍບໍ່ໄດ້.
[13]ຜູ້ໃດທີ່ມີສະຕິປັນຍາ ແລະ ມີຄວາມເຂົ້າໃຈໃນທ່າມກາງພວກເຈົ້າ? ກໍໃຫ້ຜູ້ນັ້ນພິສູດໃຫ້ເຫັນໂດຍ
ຊີວິດອັນດີງາມຂອງເຂົາໂດຍການປະຕິບັດອັນດີ ຊຶ່ງປະກອບດ້ວຍການຖ່ອມຕົວແລະ ສະຕິປັນຍາ.[14]ແຕ່ຖ້າພວກເຈົ້າມີໃຈອິດສາອັນຂົມຂື່ນ ແລະ
ມີໃຈມັກໃຫຍ່ໄຝ່ສູງ, ກໍຢ່າໂອ້ອວດ ແລະ ຢ່າຕົວະຕໍ່ຕ້ານກັບຄວາມຈິງ.
[15]ຢ່າງນີ້ບໍ່ແມ່ນສະຕິປັນຍາ ທີ່ໄດ້ມາຈາກເບື້ອງເທິງ. ແຕ່ເປັນປັນຍາຂອງຝ່າຍໂລກນີ້, ເປັນຢ່າງທຳມະດາມະນຸດ ແລະ ເປັນຢ່າງມານຮ້າຍ.
[16]ສຳລັບທີ່ໃດມີຄວາມອິດສາ ແລະ ການເຫັນແກ່ຕົວ, ບ່ອນນັ້ນກໍມີການວຸ້ນວາຍ ແລະ ມີການຊົ່ວຮ້າຍທຸກຊະນິດ.
[17]ແຕ່ປັນຍາທີ່ມາຈາກເບື້ອງເທິງນັ້ນ ກ່ອນອື່ນຫມົດກໍບໍຣິສຸດ, ແລະ ປະກອບດ້ວຍຄວາມສະຫງົບສຸກ, ຄວາມສຸພາບອ່ອນໂຍນ, ຄວາມເປັນມິດ,
ເຕັມໄປດ້ວຍຄວາມເມດຕາ ແລະ ໃຫ້ຜົນດີ, ບໍ່ເລືອກໜ້າຄົນ ແລະ ບໍ່ໜ້າຊື່ໃຈຄົດ.[18]ຫມາກຜົນຂອງຜູ້ທີ່ສ້າງສັນຕິສຸກກໍຫວ່ານຢ່າງສັນຕິສຸກ
ແລະ ໝາກຜົນທີ່ເກັບກ່ຽວນັ້ນກໍຄືຄວາມຊອບທັມ.


generated on Tue Jun 17 19:01:42 2025

4 [1]ອັນໃດເປັນສາເຫດທີ່ເຮັດໃຫ້ພວກເຈົ້າຕໍ່ສູ້ ແລະ ຜິດຖຽງກັນ? ກໍບໍ່ແມ່ນມາຈາກ ກິເລດຕັນຫາ ຂອງພວກເຈົ້ານັ້ນບໍ ທີ່ເຮັດໃຫ້ມີການຕໍ່ສູ້
ກັນຢູ່ບໍ່ຂາດພາຍໃນພວກເຈົ້າ.[2]ເຈົ້າທັງຫລາຍຢາກໄດ້, ແລະ ເຈົ້າກໍບໍ່ມີ. ພວກເຈົ້າຂ້າກັນ ແລະ ໂລບ, ແລະ ເຈົ້າກໍບໍ່ສາມາດຈະໄດ້.
ພວກເຈົ້າຜິດຖຽງ ແລະ ທະເລາະວິວາດກັນ. ພວກເຈົ້າບໍ່ມີເພາະພວກເຈົ້າບໍ່ໄດ້ຂໍ.[3]ເຈົ້າຂໍ ແລະ ບໍ່ໄດ້ຮັບ ເພາະຂໍແບບຜິດໆ,
ເພື່ອຈະເອົາໄປໃຊ້ຕາມກິເລດຕັນຫາຂອງຕົນ.

[4]ໂອຄົນຫລິ້ນຊູ້ເອີຍ! ພວກເຈົ້າບໍ່ຮູ້ ຫລືວ່າ ການເປັນມິດຕໍ່ໂລກກໍຄືການເປັນສັດຕຣູຕໍ່ພຣະເຈົ້າ? ສະນັ້ນຜູ້ໃດທີ່ຢາກເປັນມິດ ຕໍ່ໂລກກໍ
ເປັນສັດຕຣູຕໍ່ພຣະເຈົ້າ.[5]ຫລື ເຈົ້າທັງຫລາຍ ຄິດວ່າພຣະຄັມພີກ່າວວ່າແບບໄຮ້ສາຣະ, “ວິນຍານທີ່ພຣະອົງໄດ້ຊົງບັນດານໃຫ້ຢູ່ໃນເຮົາ
ທັງຫລາຍກໍແມ່ນຄວາມເຫິງສາຢ່າງເລິກແລບ”?
[6]ແຕ່ພຣະເຈົ້າໄດ້ຊົງປຣະທານພຣະຄຸນເພີ່ມຂຶ້ນ ອີກ, ເຫດສະນັ້ນພຣະຄັມພີຈຶ່ງກ່າວວ່າ, “ພຣະເຈົ້າ ຊົງຕໍ່ສູ້ຄົນ ທີ່ຈອງຫອງ,
ແຕ່ຊົງປຣະທານພຣະຄຸນ ແກ່ຄົນທີ່ຖ່ອມໃຈລົງ.”[7]ຈົ່ງນ້ອມໃຈຍອມ ຟັງພຣະເຈົ້າ, ຈົ່ງຕໍ່ສູ້ກັບມານ, ແລະ ມັນຈະໜີ ຈາກພວກເຈົ້າໄປ.
[8]ຈົ່ງເຂົ້າໃກ້ພຣະເຈົ້າ, ແລະ ພຣະອົງຈະສະເດັດມາໃກ້ພວກເຈົ້າ. ຈົ່ງຊໍາຣະມືຂອງເຈົ້າໃຫ້ສະອາດ, ຄົນບາບເອີຍ, ແລະ
ຈົ່ງຊໍາຣະໃຈຂອງເຈົ້າໃຫ້ບໍຣິສຸດ, ຄົນສອງໃຈເອີຍ.[9]ເປັນທຸກໂສກເສົ້າ, ແລະ ຮ້ອງໄຫ້! ໃຫ້ການຫົວຂອງເຈົ້າ ກັບກາຍເປັນການໂສກເສົ້າ ແລະ
ໃຫ້ຄວາມຍິນດີຂອງເຈົ້າກັບກາຍເປັນຄວາມເສົ້າໝອງ.[10]ຖ່ອມຕົວລົງຊ້ອງ ພຣະພັກອົງພຣະຜູ້ເປັນເຈົ້າ ແລະ ພຣະອົງຈະຊົງຍົກພວກເຈົ້າຂຶ້ນ.
[11]ຢ່າເວົ້ານິນທາ ຊຶ່ງກັນແລະກັນ, ພີ່ນ້ອງທັງຫລາຍເອີຍ, ຜູ້ທີ່ເວົ້ານິນທາພີ່ນ້ອງ ຫລື ກ່າວໂທດໃສ່ພີ່ນ້ອງຂອງຕົນ ຜູ້ນັ້ນກໍເວົ້າຕໍ່ຕ້ານກົດບັນຍັດ
ແລະ ຕັດສິນກົດບັນຍັດນັ້ນ, ແຕ່ຖ້າເຈົ້າກ່າວໂທດຕໍ່ກົດບັນຍັດ, ເຈົ້າກໍບໍ່ເປັນຜູ້ທີ່ ປະຕິບັດຕາມກົດບັນຍັດ, ແຕ່ເປັນຜູ້ຕັດສິນກົດບັນຍັດ.
[12]ຜູ້ຊົງແຕ່ງຕັ້ງກົດບັນຍັດ ແລະ ຜູ້ຊົງພິພາກສາພຽງແຕ່ອົງດຽວເທົ່ານັ້ນ ຄືພຣະອົງ ຜູ້ ຊົງສາມາດໂຜດໃຫ້ພົ້ນ ແລະ
ຊົງສາມາດບັນດານໃຫ້ຈິບຫາຍໄປໄດ້, ແຕ່ຝ່າຍເຈົ້າເປັນຜູ້ໃດທີ່ຈະກ່າວໂທດໃສ່ເພື່ອນບ້ານຂອງຕົນ?
[13]ດັ່ງນັ້ນຈົ່ງຟັງໃຫ້ດີ, ເຈົ້າທັງຫລາຍທີ່ເວົ້າວ່າ, “ມື້ນີ້ ຫລື ມື້ອື່ນ ພວກເຮົາຈະເຂົ້າໄປໃນເມືອງນີ້, ຈະພັກຢູ່ທີ່ນັ້ນປີໜຶ່ງ, ຈະຄ້າຂາຍ,
ແລະເອົາກໍາໄຣ.”[14]ຜູ້ໃດຮູ້ຈະເກີດຫຍັງຂຶ້ນໃນມື້ອື່ນ, ແລະ ຊີວິດຂອງພວກເຈົ້າຈະເປັນຢ່າງໃດ?
ສໍາລັບພວກເຈົ້າເປັນດັ່ງໝອກທີ່ປາກົດຢູ່ພຽງຊົ່ວຄາວແລ້ວກໍຈາງຫາຍໄປ.
[15]ແທນທີ່, ເຈົ້າຄວນຈະເວົ້າດັ່ງນັ້ນ, “ຖ້າ ພຣະເຈົ້າພໍພຣະທັຍ, ພວກເຮົາກໍຈະມີຊີວິດຢູ່ ແລະ ຈະເຮັດສິ່ງນັ້ນຫລືສິ່ງນີ້.”[16]ແຕ່ວ່າດຽວນີ້
ເຈົ້າທັງຫລາຍໂອ້ອວດ ດ້ວຍຄວາມຖືຕົວ, ການໂອ້ອວດຢ່າງນີ້, ກໍລ້ວນແຕ່ເປັນຄວາມຊົ່ວ.[17]ຖ້າຜູ້ໃດຮູ້ວ່າອັນໃດເປັນການດີ ແລະ
ບໍ່ເຮັດຜູ້ນັ້ນຈຶ່ງມີບາບ.

5 [1]ມາບັດນີ້ຄົນຮັ່ງມີເອີຍ, ຈົ່ງຮ້ອງໄຫ້ຮ່ຳໄຮ ຍ້ອນຄວາມທຸກລຳບາກ ທີ່ຈະມາຖືກພວກເຈົ້າ.[2]ຄວາມຮັ່ງມີຂອງພວກເຈົ້າໄດ້ ເສື່ອມສູນໄປແລ້ວ
ແລະ ເສື້ອຜ້າຂອງພວກເຈົ້າ ກໍຖືກມອດກັດ ກິນເສຍແລ້ວ.[3]ເງິນ ແລະ ຄຳຂອງພວກເຈົ້າກໍເກີດເປັນຂີ້ຫມ້ຽງ ແລະ ຂີ້ຫມ້ຽງນັ້ນຈະເປັນ
ພະຍານຫລັກຖານ ຕໍ່ສູ້ພວກເຈົ້າ. ມັນຈະເຜົາຜານ ເລືອດເນື້ອ ຂອງພວກເຈົ້າເຫມືອນໄຟ.
ພວກເຈົ້າໄດ້ທ້ອນໂຮມຊັບສົມບັດໄວ້ສຳລັບວັນສຸດທ້າຍ.

[4]ເບິ່ງແມ, ຄ່າຈ້າງຂອງຄົນ ທີ່ໄດ້ກ່ຽວເຂົ້າໃນ ນາຂອງພວກເຈົ້າ ຊຶ່ງພວກເຈົ້າໄດ້ສໍ້ໂກງໄວ້ນັ້ນກໍ ຮ້ອງຟ້ອງຂຶ້ນ, ແລະ
ສຽງຮ້ອງທຸກຂອງຄົນທີ່ກ່ຽວເຂົ້ານັ້ນ ກໍໄດ້ຊົງຊາບແລ້ວເຖິງຫູຂອງອົງພຣະຜູ້ເປັນເຈົ້າອົງຊົງເປັນຈອມພົນ.[5]ພວກເຈົ້າ
ໄດ້ລ້ຽງຊີວິດຢູ່ໃນໂລກຢ່າງຟຸມເຟືອຍ ແລະສະຫນຸກສະຫນານ, ພວກເຈົ້າໄດ້ບຳລຸງຈິດໃຈ ເຫມືອນລໍຖ້າວັນປະຫານ.[6]ພວກເຈົ້າໄດ້
ຕັດສິນລົງໂທດ ແລະ ໄດ້ຂ້າຄົນຊອບທັມເສຍ. ທີ່ເຂົາກໍບໍ່ໄດ້ຕໍ່ສູ້ພວກເຈົ້າ.
[7]ພີ່ນ້ອງທັງຫລາຍເອີຍ, ຈົ່ງອົດທົນຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດມາ. ຈົ່ງເບິ່ງແມ, ຊາວປູກຝັງທີ່ລໍຄອຍຜົນອັນມີຄ່າທີ່ຈະໄດ້ຮັບຈາກດິນ.
ເຂົາກໍພຽນຄອຍ, ຈົນກວ່າມີຝົນຕົ້ນຣະດູ ແລະ ຝົນປາຍຣະດູ.[8]ພວກເຈົ້າເຊັ່ນກັນ, ກໍຈົ່ງອົດທົນຢ່າງນັ້ນເຫມືອນກັນ. ຈົ່ງຕັ້ງໃຈໃຫ້ດີ,
ເພາະໃກ້ຈະເຖິງເວລາທີ່ອົງພຣະຜູ້ເປັນເຈົ້າຈະສະເດັດມາແລ້ວ.
[9]ພີ່ນ້ອງທັງຫລາຍເອີຍ, ຢ່າຈົ່ມໃຫ້ກັນ ແລະກັນ, ເພື່ອວ່າເຈົ້າຈະບໍ່ຖືກພຣະເຈົ້າຕັດສິນ. ເບິ່ງແມ, ຜູ້ຕັດສິນກໍກຳລັງຢືນຢູ່ທີ່ປະຕູ ແລະ
ພ້ອມທີ່ຈະມາປາກົດ.[10]ພີ່ນ້ອງທັງຫລາຍເອີຍ, ຈົ່ງເອົາແບບຢ່າງໃນການທົນທຸກ ແລະ ຄວາມພາກພຽນຂອງພວກຜູ້ປະກາດພຣະທັມ,
ຜູ້ໄດ້ກ່າວໃນພຣະນາມ ຂອງອົງພຣະຜູ້ເປັນເຈົ້າ.[11]ເບິ່ງແມ! ພວກເຮົາຖືວ່າຄົນເຫລົ່ານັ້ນ ທີ່ມີຄວາມອົດທົນກໍເປັນສຸກ.
ເຈົ້າທັງຫລາຍໄດ້ຍິນເລື່ອງຄວາມອົດທົນຂອງໂຢບ, ແລະ ເຈົ້າທັງຫລາຍຮູ້ເຖິງພຣະປະສົງຂອງພຣະຜູ້ເປັນເຈົ້າ, ເຊິ່ງອົງພຣະຜູ້ເປັນເຈົ້າ
ກໍຊົງເຕັມໄປດ້ວຍພຣະເມດຕາກະຣຸນາ.
[12]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ທີ່ສຳຄັນກວ່າສິ່ງອື່ນໆທັງໝົດ, ຄືຢ່າສາບານດ້ວຍອ້າງເຖິງ ສະຫວັນ ຫລື ແຜ່ນດິນໂລກ ຫລື ສິ່ງອື່ນໆ.
ແຕ່ສິ່ງໃດ, “ແມ່ນ” ກໍໃຫ້ວ່າ “ແມ່ນ” ສິ່ງໃດທີ່ “ບໍ່ແມ່ນ” ກໍໃຫ້ວ່າ “ບໍ່ແມ່ນ” ເພື່ອພວກເຈົ້າຈະບໍ່ຕົກໃນການລົງໂທດ.
[13]ມີຜູ້ໃດບໍໃນພວກເຈົ້າທີ່ທົນທຸກຢູ່? ຈົ່ງໃຫ້ຜູ້ນັ້ນພາວັນນາອະທິຖານ. ມີຜູ້ໃດບໍ່ທີ່ຊົມຊື່ນຍິນດີ? ກໍໃຫ້ຜູ້ນັ້ນຮ້ອງເພງສັນຣະເສີນ.
[14]ຜູ້ໃດທີ່ເຈັບໄຂ້ໄດ້ປ່ວຍ? ຈົ່ງໃຫ້ຜູ້ນັ້ນເຊີນບັນດາເຖົ້າແກ່ໃນຄຣິສຕະຈັກມາ, ພາວັນນາອະທິຖານສຳລັບຕົນ.
ໃຫ້ພວກເພິ່ນເຈີມຜູ້ນັ້ນດ້ວຍນ້ຳມັນຊາໂລມທາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ.[15]ຄຳພາວັນນາອະທິຖານທີ່ປະກອບດ້ວຍຄວາມເຊື່ອ
ຈະເຮັດໃຫ້ຜູ້ປ່ວຍນັ້ນລອດພົ້ນ, ແລະ ອົງພຣະຜູ້ເປັນເຈົ້າຈະຊົງໂຜດໃຫ້ຜູ້ນັ້ນລຸກຂຶ້ນດີເປັນປົກກະຕິ.
ຖ້າຜູ້ນັ້ນໄດ້ເຮັດຜິດເຮັດບາບພຣະອົງກໍຈະຊົງໂຜດອະພັຍໃຫ້.
[16]ເຫດສະນັ້ນ ເຈົ້າທັງຫລາຍ ຈົ່ງສາຣະພາບ ຜິດຂອງຕົນຕໍ່ກັນ ແລະ ກັນ, ແລະ ຈົ່ງພາວັນນາອະທິຖານເພື່ອກັນ ແລະ ກັນ,
ເພື່ອເຈົ້າທັງຫລາຍຈະໄດ້ຮັບການຮັກສາປ່ຽວຢາດີພະຍາດ. ຄຳພາວັນນາອະທິຖານຂອງຜູ້ຊອບທັມມີຣິດສັກສິດເຮັດໃຫ້ເກີດຜົນ.[17]ເອລີຢາ
ກໍເປັນມະນຸດທຳມະດາສາມັນເຫມືອນກັບພວກເຮົາ, ເພິ່ນໄດ້ພາວັນນາອະທິຖານດ້ວຍໃຈເອົາຈິງເອົາຈັງ ຂໍບໍ່ໃຫ້ຝົນຕົກ, ແລະ
ຝົນກໍບໍ່ຕົກເທິງແຜ່ນດິນ ເຖິງສາມປີກັບຫົກເດືອນ.[18]ແລ້ວເອລີຢາ ກໍໄດ້ພາວັນນາອະທິຖານອີກ ໃຫ້ທ້ອງຟ້າກໍໄດ້ຖອກເທຝົນລົງມາ, ແລະ
ແຜ່ນດິນກໍເກີດພືດຜົນນາໆຊະນິດ.
[19]ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຖ້າຄົນ ໃດໃນພວກເຈົ້າຫລົງຜິດໄປຈາກຄວາມຈິງ, ແລະ ຖ້າຜູ້ໃດເຮັດໃຫ້ຄົນນັ້ນຕ່າວຄືນມາອີກ,
[20]ຜູ້ນັ້ນຄວນຮູ້ວ່າ ຜູ້ໃດກໍຕາມທີ່ເຮັດໃຫ້ຄົນບາບຄົນຫນຶ່ງຕ່າວຄືນມາຈາກທາງຜິດຂອງເຂົານັ້ນ
ກໍຈະໄດ້ປົກປ້ອງຈິດວິນຍານຂອງຄົນນັ້ນໃຫ້ພົ້ນຈາກຄວາມຕາຍ, ແລະ ທັງໃຫ້ຄວາມຜິດບາບຈຳນວນຫລວງຫລາຍໄດ້ຮັບການອະພັຍ.

# 1 ເປໂຕ

1 [1]ຈາກເປໂຕ, ອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ, ເຖິງພີ່ນ້ອງຕ່າງຊາດທີ່ກະຈັດກະຈາຍໄປ, ແລະ ຜູ້ທີ່ຖືກເລືອກສັນໄວ້ໃນແຂວງປົນໂຕ,
ແຂວງ ຄາລາເຕຍ, ແຂວງກາປາໂດເກຍ, ແຂວງເອເຊຍ ແລະ ແຂວງບີທີເນຍ.
[2]ນີ້ແມ່ນຖືກຕາມທີ່ພຣະເຈົ້າພຣະບິດາເຈົ້າໄດ້ຊົງລ່ວງຮູ້ໄວ້ກ່ອນ, ໂດຍພຣະວິນຍານໄດ້ຊົງຊຳຣະໃຫ້ ບໍຣິສຸດເພື່ອຈະເຊື່ອຟັງພຣະເຢຊູຄຣິດເຈົ້າ
ແລະ ໄດ້ຮັບການຊຳຣະດ້ວຍພຣະໂລຫິດຂອງພຣະອົງ. ຂໍໃຫ້ພຣະຄຸນ ແລະ ສັນຕິສຸກຈົ່ງບັງເກີດ ທະວີຄູນແກ່ທ່ານທັງຫລາຍເຖີ້ນ.

[3]ສາທຸການແດ່ພຣະເຈົ້າ ພຣະບິດາເຈົ້າແຫ່ງອົງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ. ໃນພຣະເມດຕາທີ່ໃຫຍ່ຫລວງຂອງພຣະອົງ,
ພຣະອົງຊົງໂຜດໃຫ້ເຮົາບັງເກີດໃໝ່ສຳລັບຄວາມເຊື່ອຫມັ້ນຂອງມໍຣະດົກ.
ນີ້ຄືມໍຣະດົກໂດຍວິທີການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດເຈົ້າຈາກຄວາມຕາຍ,[4]ນີ້ເປັນມໍຣະດົກຊຶ່ງຈະບໍ່ຈິບຫາຍ, ປາສະຈາກມົນທິນ, ແລະ
ບໍ່ຫຽວແຫ້ງ. ຊຶ່ງໄດ້ຕຽມໄວ້ໃນສະຫວັນເພື່ອທ່ານທັງຫລາຍ.[5]ທ່ານໄດ້ຮັບການປົກປ້ອງໂດຍຣິດເດດຂອງພຣະເຈົ້າ ໂດຍຜ່ານທາງຄວາມເຊື່ອ,
ໃຫ້ເຂົ້າໃນຄວາມພົ້ນຊຶ່ງພ້ອມຈະປາກົດໃນວັນສຸດທ້າຍ.
[6]ທ່ານຈະດີໃຈຫລາຍສຳລັບເລື່ອງນີ້, ເຖິງແມ່ນວ່າຕອນນີ້ມັນເປັນສິ່ງຈຳເປັນສຳລັບທ່ານ ທີ່ຈະຮູ້ສຶກໂສກເສົ້າໃນບັນຫາທີ່ແຕກຕ່າງກັນ.
[7]ນີ້ມີໄວ້ສຳລັບການພິສູດຄວາມເຊື່ອຂອງທ່ານ, ຊຶ່ງມີຄ່າຍິ່ງກວ່າທອງຄຳຊຶ່ງສູນຫາຍໄປ. ແມ່ນວ່າຈະມີການທົດສອບດ້ວຍໄຟ.
ນີ້ເກີດຂຶ້ນເພື່ອໃຫ້ຄວາມເຊື່ອຂອງທ່ານຈະພົບວ່າຈະສົ່ງຜົນໃຫ້ເກີດການສັນຣະເສີນສະຫງ່າຣາສີ, ແລະ ພຣະກຽດໃນເວລາທີ່
ພຣະເຢຊູຄຣິດເຈົ້າຈະສະເດັດມາປາກົດ.
[8]ພຣະອົງຜູ້ທີ່ທ່ານທັງຫລາຍຍັງບໍ່ໄດ້ເຫັນແຕ່ທ່ານຍັງຮັກພຣະອົງຢູ່. ແມ່ນວ່າຂະນະນີ້ທ່ານບໍ່ເຫັນພຣະອົງ, ແຕ່ທ່ານຍັງເຊື່ອໃນພຣະອົງ ແລະ
ຊື່ນຊົມດ້ວຍຄວາມປິຕິຍິນດີເກີນທີ່ຈະອະທິບາຍໄດ້.[9]ຕອນນີ້ທ່ານຈະໄດ້ຮັບດ້ວຍຕົວເອງຊຶ່ງເປັນຜົນມາຈາກຄວາມເຊື່ອຂອງທ່ານ,
ຄວາມລອດພົ້ນຝ່າຍວິນຍານຈິດຂອງທ່ານ.[10]ບັນດາຜູ້ເຜີຍພຣະທັມໄດ້ຄົ້ນຄ້ວາ ແລະ ໄດ້ສືບຖາມຢ່າງຮອບຄອບກຽວກັບຄວາມພົ້ນນີ້,
ກ່ຽວກັບພຣະຄຸນທີ່ເປັນຂອງທ່ານ.


generated on Tue Jun 17 19:01:42 2025

[11]ພວກເຂົາໄດ້ສືບຄົ້ນຫາໄດ້ຮູ້ເຖິງບຸກຄົນ ແລະ ເມື່ອພຣະວິນຍານຂອງພຣະເຢຊູຄຣິດເຈົ້າໃນພວກເຂົາ ໄດ້ບອກກັບພວກເຂົາ.
ນີ້ເກີດຂຶ້ນຂະນະທີ່ເຂົາກຳລັງບອກພວກເຂົາລ່ວງຫນ້າກ່ຽວກັບຄວາມທຸກທໍຣະມານຂອງພຣະຄຣິດເຈົ້າ ແລະ ເຖິງສະຫງ່າຣາສີ ຫຼັງຈາກນັ້ນ.
[12]ມັນເປັນທີ່ປະຈັກຕໍ່ຜູ້ເຜີຍພຣະທັມວ່າພວກເຂົາບໍ່ ໄດ້ປະຕິບັດສຳລັບຕົວພວກເຂົາເອງແຕ່ສຳລັບທ່ານທັງຫລາຍ.
ນີ້ຄືສິ່ງທີ່ພວກເຂົາກຳລັງເຮັດໃນເລື່ອງທີ່ກ່ຽວກັບສິ່ງທີ່ປະກາດໃຫ້ທ່ານ
ໂດຍວິທີການຂອງພຣະວິນຍານບໍຣິສຸດເຈົ້າທີ່ຊົງໂຜດປະທານມາຈາກສະຫວັນ -
ສິ່ງເຫລົ່ານີ້ເປັນສິ່ງຊຶ່ງພວກທູດສະຫວັນປາຖະໜາທີ່ຈະໄດ້ຮັບການເປີດເຜີຍ.
[13]ດັ່ງນັ້ນຈົ່ງຕຽມໃຈຂອງທ່ານໄວ້ໃຫ້ດີ, ຈົ່ງຂົ້ມໃຈ,
ຕັ້ງຄວາມຫວັງໃຫ້ເຕັມບໍຣິບູນໃນພຣະຄຸນເມື່ອພຣະເຢຊູຄຣິດເຈົ້າຈະຊົງໂຜດສຳແດງໃຫ້ແກ່ທ່ານໃນເວລາທີ່ພຣະເຢຊູຄຣິດເຈົ້າສະເດັດມາປາກົດ.
[14]ໂດຍທີ່ທ່ານເປັນລູກທີ່ເຊື່ອຟັງຂໍຢ່າໄດ້ປະພຶດຕາມກິເຫລດຕັນຫາຢ່າງທີ່ເກີດຈາກຄວາມໂງ່ງ່າວຂອງທ່ານນັ້ນ.
[15]ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ, ທ່ານທັງຫລາຍຈົ່ງປະພຶດຕົນໃຫ້ບໍຣິສຸດ[16]ດັ່ງທີ່ມີພຣະຄັມຂຽນໄວ້ແລ້ວວ່າ,
"ທ່ານທັງຫລາຍ ຈົ່ງເປັນຄົນບໍຣິສຸດເພາະເຮົາບໍຣິສຸດ.”[17]ແລະ ຖ້າທ່ານເອີ້ນພຣະອົງວ່າ "ພຣະບິດາ"
ຜູ້ຊົງພິພາກສາທຸກຄົນຕາມການກະທຳຂອງເຂົາ ໂດຍບໍ່ມີອັກຄະຕິຈົ່ງປະຕິບັດຕົນດ້ວຍຄວາມຢຳເກງຕະຫລອດເວລາທີ່ທ່ານຢູ່ໃນໂລກນີ້.
[18]ເພາະພວກເຈົ້າກໍ່ຮູ້ຢູ່ແລ້ວວ່າ ພວກເຈົ້າຖືກໄຖ່ໃຫ້ເປັນອິສຣະ ຈາກການການດຳເນີນຊີວິດອັນບໍ່ມີປະໂຫຍດ
ທີ່ທ່ານໄດ້ຮຽນຮູ້ຈາກບັນພະບຸຣຸດຂອງພວກທ່ານ ບໍ່ແມ່ນໄຖ່ດ້ວຍສິ່ງຂອງທີ່ເສື່ອມສູນໄປເຫມືອນເງິນ ແລະ ຄຳ.
[19]ແຕ່ທ່ານໄດ້ຮັບການຊົງໄຖ່ດ້ວຍພຣະໂລຫິດອັນປະເສີດຂອງພຣະຄຣິດເຈົ້າ, ເປັນເຫມືອນລູກແກະທີ່ບໍ່ມີຕຳຫນິ ຫລື ຮອຍດ່າງ.
[20]ພຣະຄຣິດເຈົ້າໄດ້ຮັບການເລືອກໄວ້ກ່ອນການວາງຮາກຖານສ້າງໂລກ,
ແຕ່ດຽວນີ້ພຣະຄຣິດເຈົ້າຊົງໄດ້ປາກົດພຣະອົງໃຫ້ແກ່ທ່ານໃນເວລາສຸດທ້າຍ.[21]ຜ່ານທາງພຣະອົງທ່ານເຊື່ອໃນພຣະເຈົ້າ, ຜູ້ຊົງບັນດານ
ໃຫ້ພຣະອົງໃຫ້ຟື້ນຄືນມາຈາກຕາຍ ແລະ ຄົນທີ່ເຂົາຖວາຍພຣະກຽດເພື່ອໃຫ້ຄວາມເຊື່ອ ແລະ
ຄວາມເຊື່ອຫມັ້ນຂອງທ່ານຈະຕັ້ງຢູ່ໃນພຣະເຈົ້າ.
[22]ທີ່ທ່ານທັງຫລາຍໄດ້ຊຳຣະຈິດໃຈຂອງທ່ານໃຫ້ບໍຣິສຸດໂດຍການເຊື່ອຟັງຄວາມຈິງ. ນີ້ຄືວັດຖຸປະສົງຂອງຄວາມຮັກສັນພີ່ນ້ອງ;
ດັ່ງນັ້ນຈົ່ງຮັກຊຶ່ງກັນ ແລະ ກັນຢ່າງຈິງຈັງຈາກຫົວໃຈ.[23]ທ່ານທັງຫລາຍໄດ້ບັງເກີດໃໝ່ແລ້ວ, ບໍ່ແມ່ນເກີດຈາກແນວປູກທີ່ເປື່ອຍເນົ່າໄດ້,
ແຕ່ເກີດຈາກແນວປູກທີ່ບໍ່ເປື່ອຍເນົ່າ ໂດຍຜ່ານພຣະທັມຂອງພຣະເຈົ້າອັນຊົງຊີວິດ ແລະ ຕັ້ງຫມັ້ນຄົງ.
[24]ສຳລັບ " ບັນດາເນື້ອຫນັງກໍເປັນເຫມືອນດັ່ງຕົ້ນຫຍ້າ, ແລະ ສະຫງ່າຣາສີຂອງພວກເຂົາ ກໍເປັນດັ່ງດອກຫຍ້າ. ຕົ້ນຫຍ້າຫ່ຽວແຫ້ງໄປ ແລະ
ດອກມັນກໍຊຸຫລົ່ນໄປ.[25]ແຕ່ພຣະຄັມຂອງອົງພຣະຜູ້ເປັນເຈົ້າຕັ້ງຫມັ້ນຄົງຢູ່ຕະຫລອດໄປເປັນນິດ”
ນີ້ຄືຂ່າວປະເສີດທີ່ໄດ້ປະກາດໃຫ້ທ່ານທັງຫລາຍຮູ້ແລ້ວ.


generated on Tue Jun 17 19:01:42 2025

2 [1]ທ່ານທັງຫລາຍຈົ່ງລະຖິ້ມຄວາມຊົ່ວຮ້າຍ ບັນດາກົນອຸບາຍທັງປວງ, ການຫນ້າຊື່ໃຈຄົດ, ຄວາມອິດສາຣິດສະຫຍາ ແລະ
ຄຳເວົ້ານິນທາໃສ່ຮ້າຍທັງຫມົດ.[2]ຈົ່ງເປັນເຫມືອນເດັກນ້ອຍໆທີ່ເກີດໃຫມ່, ຈົ່ງປາຖະຫນາຫານ້ຳນົມ
ຝ່າຍຈິດວິນຍານອັນບໍຣິສຸດເພື່ອຈະເຮັດໃຫ້ທ່ານທັງຫລາຍເຕີບໂຕຂຶ້ນໃນຄວາມພົ້ນ.[3]ຖ້າທ່ານໄດ້ຄົ້ນພົບແລະ ຮູ້ແລ້ວວ່າ,
ອົງພຣະຜູ້ເປັນເຈົ້າປະກອບດ້ວຍພຣະເມດຕາກະຣຸນາ.

[4]ຈົ່ງມາຫາພຣະອົງ ຄືມາເຖິງສີລາອັນມີຊີວິດຢູ່ຊຶ່ງມະນຸດໄດ້ປະຕິເສດບໍ່ຍອມຮັບແລ້ວແຕ່ວ່າພຣະເຈົ້າ ໄດ້ຊົງເລືອກໄວ້ໂດຍພຣະເຈົ້າຊົງຖືວ່າ
ມີຄຸນຄ່າອັນປະເສີດ
ເຫມືອນພຣະອົງ[5]ດັ່ງນັ້ນທ່ານທັງຫລາຍກໍເປັນເຫມືອນສີລາທີ່ມີຊີວິດທີ່ກຳລັງກໍ່ຂຶ້ນເປັນວິຫານຝ່າຍວິນຍານເພື່ອເປັນປະໂລຫິດ
ບໍຣິສຸດເພື່ອຖວາຍເຄື່ອງບູຊາຝ່າຍວິນຍານທີ່ພໍພຣະທັຍຂອງພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າ.
[6]ມີຄຳຂຽນໄວ້ໃນພຣະຄັມພີດ້ວຍວ່າ, "ເບິ່ງແມ! ເຮົາວາງສີລາກ້ອນໜຶ່ງລົງໃນເມືອງຊີໂອນ ເປັນຫີນເສົາເອກທີ່ຊົງເລືອກແລ້ວ, ແລະ
ເປັນຫີນທີ່ມີຄ່າອັນປະເສີດແລະ ຜູ້ໃດທີ່ເຊື່ອໃນພຣະອົງນັ້ນກໍຈະບໍ່ໄດ້ຮັບຄວາມອັບອາຍຈັກເທື່ອ."
[7]ເພື່ອເປັນກຽດແກ່ທ່ານທັງຫລາຍທີ່ ວາງໃຈເຊື່ອ. ແຕ່ "ຫີນທີ່ຊ່າງກໍ່ໄດ້ປະຖິ້ມໄດ້ກັບກາຍມາ ເປັນຫີນເສົາເອກ."[8]ແລະ
"ເປັນຫີນທີ່ເຮັດໃຫ້ຄົນສະດຸດ ແລະ ເປັນຫີນທີ່ເຮັດໃຫ້ຂັດເຄືອງໃຈທີ່ເຂົາສະດຸດນັ້ນ" ເພາະເຂົາບໍ່ເຊື່ອຟັງພຣະຄັມ
ຕາມທີ່ເຂົາຖືກກຳນົດໄວ້ສຳລັບການນີ້ດ້ວຍ.
[9]ແຕ່ຝ່າຍທ່ານທັງຫລາຍເປັນຜູ້ຖືກຊົງເລືອກໄວ້ແລ້ວ, ເປັນປະໂລຫິດ ຫລວງ, ເປັນປະຊາຊາດບໍຣິສຸດ, ເປັນຊົນຊາດຂອງພຣະອົງ,
ໂດຍສະເພາະເພື່ອທ່ານທັງຫລາຍຈະໄດ້ປະກາດການກະທຳທີ່ຍິ່ງໃຫຍ່ຂອງພຣະອົງຜູ້ໄດ້ຊົງເອີ້ນທ່ານທັງຫລາຍໃຫ້ອອກມາຈາກຄວາມມືດເຂົ້າໄປສູ່ຄວາມສະຫວ່
[10]ຄັ້ງຫນຶ່ງທ່ານທັງຫຼາຍບໍ່ໄດ້ເປັນຊົນຊາດ, ແຕ່ບັດນີ້ທ່ານ ເປັນຊົນຊາດຂອງພຣະເຈົ້າແລ້ວ. ເມື່ອກ່ອນທ່ານທັງຫລາຍບໍ່ໄດ້ຮັບພຣະກະຣຸນາ,
ແຕ່ບັດນີ້ທ່ານໄດ້ຮັບພຣະກະຣຸນາແລ້ວ.
[11]ພີ່ນ້ອງທີ່ຮັກ, ທີ່ເປັນຄົນຕ່າງຊາດ ແລະ ເປັນຜູ້ທ່ອງທ່ຽວ ໃຫ້ທ່ານລະເວັ້ນຈາກຕັນຫາຂອງເນື້ອຫນັງຊຶ່ງທຳການຕໍ່ສູ້ຈິດວິນຍານຂອງທ່ານ.
[12]ທ່ານທັງຫລາຍຈົ່ງດຳເນີນຊີວິດທີ່ດີທ່າມກາງຄົນຕ່າງຄວາມເຊື່ອ, ເພື່ອວ່າໃນທີ່ພວກເຂົາຕິຕຽນທ່ານວ່າເປັນຄົນເຮັດຊົ່ວນັ້ນ,
ເມື່ອພວກເຂົາສັງເກດເຫັນຄຸນຄວາມດີຂອງທ່ານແລ້ວພວກເຂົາຈະໄດ້ສັນຣະເສີນພຣະເຈົ້າໃນວັນຊຶ່ງພຣະອົງຈະຊົງສະເດັດມາປາກົດ.
[13]ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າທ່ານຈົ່ງເຊື່ອຟັງກະສັດຜູ້ມີອຳນາດສູງສຸດ.[14]ແລະດ້ວຍຈະເປັນເຈົ້າເມືອງຜູ້ທີ່ໄດ້ຮັບຄຳສັ່ງນັ້ນ
ໃຫ້ລົງໂທດຜູ້ທີ່ເຮັດຊົ່ວ ແລະ ຍ້ອງຍໍຜູ້ທີ່ເຮັດດີ.
[15]ສຳລັບເລື່ອງນີ້ເປັນພຣະປະສົງຂອງພຣະເຈົ້າທີ່ຈະໃຫ້ທ່ານທັງຫລາຍລະງັບຄວາມໂງ່ງ່າວຂອງຄົນຊົ່ວຊ້າໃຫ້ສະຫງົບດ້ວຍຄຸນຄວາມດີ.
[16]ຈົ່ງເປັນເຫມືອນຄົນທີ່ມີ ເສຣີພາບແຕ່ທ່ານຢ່າໃຊ້ເສຣີພາບນັ້ນໃຫ້ເປັນທີ່ປົກປິດຄວາມຊົ່ວໄວ້ ແຕ່ຈົ່ງໃຊ້ເຫມືອນເປັນ ຜູ້ຮັບໃຊ້ຂອງພຣະເຈົ້າ.
[17]ທຸກໆຄົນຈົ່ງຮັກບັນດາພີ່ນ້ອງ ຈົ່ງຢຳເກງພຣະເຈົ້າ ແລະ ຈົ່ງຖວາຍກຽດແກ່ກະສັດ.
[18]ຜູ້ຮັບໃຊ້ທັງຫລາຍ, ຈົ່ງຍອມຟັງນາຍຂອງທ່ານດ້ວຍຄວາມເຄົາຣົບທຸກຢ່າງ. ບໍ່ແມ່ນແຕ່ນາຍຜູ້ເປັນຄົນໃຈດີ ແລະ ສຸພາບເທົ່ານັ້ນ,
ແຕ່ທັງຕໍ່ນາຍທີ່ຮ້າຍດ້ວຍ.[19]ເພາະມັນເປັນທີ່ຫນ້າສັນຣະເສີນຖ້າໃຜຍັງ ຄົງເຈັບປວດທຸກລຳບາກໃນຂະນະທີ່ຮັບຄວາມບໍ່ເປັນທັມ
ເນື່ອງຈາກຄວາມເຊື່ອຂອງເຂົາຕໍ່ພຣະເຈົ້າ.[20]ເພາະຖ້າ ພວກເຈົ້າເຮັດການຊົ່ວ ແລະ
ທົນເອົາການຂ້ຽນຕີໃນຂະນະທີ່ຖືກລົງໂທດເພາະເຮັດຊົ່ວຈະເປັນການດີການຊອບຢ່າງໃດ? ແຕ່ຖ້າທ່ານໄດ້ເຮັດການດີ ແລະ
ຈາກນັ້ນທ່ານຕ້ອງທົນທຸກທໍຣະມານໃນຂະນະທີ່ຖືກລົງໂທດ, ນີ້ເປັນທີ່ຫນ້າສັນຣະເສີນກັບພຣະເຈົ້າ.
[21]ເພາະມັນຄືການທີ່ທ່ານທັງຫລາຍຊົງຖືກເອີ້ນເພາະວ່າພຣະຄຣິດເຈົ້າ ກໍໄດ້ຊົງຮັບທົນທຸກທໍຣະມານສຳລັບທ່ານ.
ພຣະອົງໄດ້ເປັນແບບຢ່າງແກ່ເຮົາເພື່ອທ່ານຈະໄດ້ເຮັດຕາມຢ່າງພຣະອົງ.[22]ພຣະອົງບໍ່ໄດ້ເຮັດບາບເລີຍ, ແລະ
ບໍ່ໄດ້ພົບກົນອຸບາຍໃນປາກຂອງພຣະອົງເລີຍ.[23]ເມື່ອເຂົາກ່າວຄຳຫມິ່ນປະຫມາດຕໍ່ພຣະອົງ,
ພຣະອົງບໍ່ໄດ້ຊົງກ່າວຕອບເຂົາດ້ວຍຄຳຫຍາບຊ້າເລີຍ, ເມື່ອພຣະອົງຊົງທົນທຸກພຣະອົງບໍ່ໄດ້ຂູ່ອາຄາດ,
ແຕ່ຊົງມອບເລື່ອງຂອງພຣະອົງໄວ້ກັບພຣະເຈົ້າຜູ້ຊົງພິພາກສາຢ່າງ ຍຸດຕິທັມ.
[24]ພຣະອົງເອງໄດ້ຊົງຮັບແບກບາບຂອງເຮົາໄວ້ໃນພຣະກາຍຂອງພຣະອົງທີ່ເທິງໄມ້ນັ້ນ,
ເພື່ອວ່າທີ່ເຮົາອາດຈະບໍ່ໄດ້ມີສ່ວນຮ່ວມຫລາຍຂຶ້ນໃນການບາບ, ແລະເພື່ອໃຫ້ເຮົາມີຊີວິດຢູ່ໄດ້ດ້ວຍຄວາມຊອບທັມ,
ຕາມຮອຍບາດແຜຂອງພຣະອົງທີ່ທ່ານໄດ້ຮັບການຮັກສາແລ້ວ.[25]ເພາະວ່າທ່ານທັງຫລາຍເປັນເຫມືອນແກະທີ່ຫລົງເສຍໄປ,
ແຕ່ບັດນີ້ໄດ້ກັບຄືນມາຫາພຣະຜູ້ລ້ຽງ ແລະຜູ້ເບິ່ງແຍງແຫ່ງຈິດວິນຍານຂອງທ່ານທັງຫລາຍແລ້ວ.

 generated on Tue Jun 17 19:01:42 2025

# 3 [1]ດ້ວຍວິທີນີ້, ທ່ານທັງຫລາຍທີ່ເປັນພັນລະຍາຈົ່ງເຊື່ອຟັງສາມີຂອງຕົນ. ຈົ່ງເຮັດເຊັ່ນນີ້ເພື່ອວ່າສາມີບາງຄົນຈະບໍ່ເຊື່ອຟັງພຣະທັມ,

ແຕ່ການປະຕິບັດຂອງພັນລະຍາກໍອາດຈະຈູງໃຈເຂົາໄດ້ດ້ວຍ ໂດຍບໍ່ຕ້ອງເວົ້າຫຍັງເລີຍ.
[2]ເພາະວ່າພວກເຂົາຈະໄດ້ເຫັນການປະຕິບັດທີ່ຈິງໃຈອັນສະແດງໃຫ້ເຫັນເຖິງການໃຫ້ກຽດຂອງທ່ານ.

[3]ຢ່າໃຫ້ເປັນການປະດັບພາຍນອກຄື: ການແຕ່ງຊົງຜົມປະດັບດ້ວຍເຄື່ອງທອງຄໍາຫລື ເສື້ອຜ້າທັນສະໄຫມ.
[4]ແຕ່ຈົ່ງໃຫ້ເປັນການປະດັບແຫ່ງຈິດໃຈພາຍໃນ ແລະຄວາມງາມທີ່ ບໍ່ຮູ້ເສື່ອມສູນແຫ່ງວິນຍານທີ່ສະຫງົບ ແລະ
ສຸພາບຊຶ່ງເປັນສິ່ງທີ່ມີຄ່າສູງໃນສາຍພຣະເນດຂອງພຣະເຈົ້າ.
[5]ດ້ວຍວ່າສະຕຣີບໍລິສຸດໃນຄັ້ງບູຮານນັ້ນກໍໄດ້ປະດັບກາຍເຊັ່ນນີ້ຢ່າງດຽວກັນພວກເຂົາເຊື່ອວາງໃຈໃນພຣະເຈົ້າ ແລະ ເຊື່ອຟັງສາມີຂອງຕົນ.
[6]ເຊັ່ນນາງຊາຣາຟັງອັບຣາຮາມ ແລະ ເອີ້ນເຂົາວ່ານາຍ, ດຽວນີ້ທ່ານກໍເປັນລູກຫລານຂອງນາງຖ້າທ່ານທັງຫລາຍເຮັດດີ ແລະ
ບໍ່ມີຄວາມຢ້ານກົວຕໍ່ສິ່ງໃດ.
[7]ໃນທໍານອງດຽວກັນ, ສາມີກໍເໝືອນກັນຈົ່ງຢູ່ກິນກັບພັນລະຍາໂດຍໃຊ້ຄວາມເຂົ້າໃຈ, ວ່ານາງເປັນເພດທີ່ອ່ອນແອກວ່າ,
ທ່ານຈົ່ງໃຫ້ກຽດພັນລະຍາເຫມືອນເປັນຜູ້ຮັບມໍຣະດົກແຫ່ງຂອງປະທານແຫ່ງຊີວິດຮ່ວມກັນຈົ່ງທໍາເຊັ່ນນີ້ເພື່ອຈະໄດ້ບໍ່ມີສິ່ງຫນຶ່ງສິ່ງໃດຂັດຂວາງຄໍາພາວັນນາອະທິຖ
[8]ສຸດທ້າຍນີ້ທ່ານທັງຫລາຍຈົ່ງເປັນນໍ້າຫນຶ່ງໃຈດຽວກັນ, ຈົ່ງເຫັນອົກເຫັນໃຈກັນ, ຮັກກັນສັນພີ່ນ້ອງມີຈິດໃຈອ່ອນໂຍນ ແລະ ອ່ອນນ້ອມຖ່ອມຕົນ.
[9]ຢ່າຮ້າຍຕອບແທນການຮ້າຍ ແລະ ຢ່າດ່າຕອບແທນການດ່າ, ແຕ່ກົງກັນຂ້າມຈົ່ງອວຍພອນແກ່ເຂົາ.
ເພາະພຣະອົງໄດ້ຊົງເອີ້ນທ່ານໃຫ້ເຮັດເຊັ່ນນັ້ນແຫລະ ເພື່ອທ່ານຈະໄດ້ຮັບພຣະພອນເປັນມໍຣະດົກ.
[10]"ຜູ້ທີ່ຈະຮັບຊີວິດ ແລະ ປາຖະໜາທີ່ຈະເຫັນວັນດີ ກໍໃຫ້ຜູ້ນັ້ນຫ້າມລີ້ນຂອງຕົນຈາກຄວາມຊົ່ວ ແລະ ຫ້າມປາກບໍ່ໃຫ້ກ່າວຄໍາອຸບາຍລໍ້ລວງ.
[11]ໃຫ້ເຂົາຫັນອອກໄປຈາກສິ່ງທີ່ບໍ່ດີ ແລະ ເຮັດໃນສິ່ງທີ່ເປັນສິ່ງທີ່ດີໃຫ້ເຂົາສະແຫວງ ຫາຄວາມສະຫງົບສຸກ ແລະ ດໍາເນີນຕາມນັ້ນ.
[12]ເພາະວ່າພຣະເນດຂອງອົງພຣະຜູ້ເປັນເຈົ້າຊົງເຝົ້າເບິ່ງຄົນຊອບທັມ ແລະ ຫູຂອງພຣະອົງກໍຊົງຮັບຟັງຄໍາພາວັນນາອະທິຖານຂອງເຂົາ
ແຕ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ ຊົງຕັ້ງຕໍ່ສູ້ກັບຄົນທັງຫລາຍທີ່ເຮັດການຊົ່ວ."
[13]ແມ່ນຜູ້ໃດຈະທໍາຮ້າຍທ່ານໄດ້ ຖ້າທ່ານທັງຫລາຍດຸຫມັ່ນໃນການປະພຶດທໍາຄວາມດີ?
[14]ແຕ່ຖ້າທ່ານທັງຫລາຍຕ້ອງທົນທຸກເພາະເຫດເຮັດການຊອບທັມທ່ານກໍເປັນສຸກ. ຢ່າຢ້ານກົວໃນສິ່ງທີ່ເຂົາກ່າວຫາ ແລະ
ຢ່າຄິດວິຕົກກັງວົນໄປເລີຍ.
[15]ແຕ່ຈົ່ງຕິດກັບພຣະຄຣິດອົງພຣະຜູ້ເປັນເຈົ້າໄວ້ໃນໃຈຂອງທ່ານວ່າ ເປັນອົງບໍຣິສຸດ. ຈົ່ງມີຄວາມພ້ອມຢູ່ສະເຫມີທີ່ຈະຕອບທຸກຄົນທີ່ຖາມທ່ານວ່າ
ເປັນຫຍັງທ່ານມີຄວາມເຊື່ອຫມັ້ນໃນພຣະເຈົ້າ. ເຮັດແບບນີ້ດ້ວຍຄວາມອ່ອນໂຍນ ແລະ ຄວາມເຄົາຣົບ.
[16]ມີຈິດສໍານຶກທີ່ດີເພື່ອໃຫ້ຄົນທີ່ດູຖູກຊີວິດທີ່ດີຂອງທ່ານໃນພຣະຄຣິດເຈົ້າອາດຈະລະອາຍໃຈເພາະພວກເຂົາເວົ້າຕໍ່ວ່າທ່ານເຫມືອນວ່າທ່ານເປັນຜູ້ກະທໍາຊົ່ວ[17]ຖ້ານ້ຳ
ກໍດີກວ່າຕ້ອງທົນທຸກເພາະການກະທໍາຊົ່ວ.
[18]ດ້ວຍວ່າພຣະຄຣິດເຈົ້າ ກໍເຫມືອນກັນກໍໄດ້ທົນທຸກຄັ້ງດຽວເທົ່ານັ້ນ ເພາະຄວາມຜິດບາບຄືພຣະອົງຜູ້ຊອບທັມຕ້ອງທົນທຸກເພື່ອເຮົາ,
ທີ່ເປັນຜູ້ບໍ່ຊອບທັມເພື່ອພຣະອົງຈະໄດ້ນໍາເຮົາທັງຫລາຍໄປເຖິງພຣະເຈົ້າ.
ຝ່າຍເນື້ອຫນັງພຣະອົງກໍຊົງສິ້ນພຣະຊົນແຕ່ຊົງມີຊີວິດຂຶ້ນໂດຍພຣະວິນຍານ.[19]ແລະ ໂດຍພຣະວິນຍານເຊັ່ນກັນພຣະອົງໄດ້ສະເດັດໄປ
ປະກາດແກ່ບັນດາວິນຍານທີ່ຖືກຄຸກຢູ່.[20]ຊຶ່ງແຕ່ກ່ອນເຂົາທັງຫລາຍບໍ່ໄດ້ເຊື່ອຟັງ ຄາວເມື່ອພຣະເຈົ້າຊົງໂຜດສໍາແດງຄວາມອົດທົນດົນນານ.
ຄືໃນສະໄຫມຂອງໂນອາ, ເມື່ອກໍາລັງສ້າງເຮືອ, ແລະ ພຣະເຈົ້າໄດ້ຮັກສາມຄົນຈໍານວນຫນ້ອຍ ຄືແປດຄົນໃຫ້ຜ່ານພົ້ນນໍ້າຖ້ວມນັ້ນ.
[21]ນີ້ຄືສັນຍາລັກຂອງພິທີຮັບ ບັບຕິສະມາທີ່ຊ່ວຍເຮົາໃຫ້ລອດພົ້ນ ບໍ່ແມ່ນເປັນການຊໍາຣະມົນທິນທາງຮ່າງກາຍ
ແຕ່ໃຫ້ມີໃຈສໍານຶກຜິດແລະຊອບອັນດີຈໍາເພາະພຣະເຈົ້າໂດຍຊຶ່ງພຣະເຢຊູຄຣິດເຈົ້າໄດ້ຊົງເປັນຄືນມາຈາກຕາຍ[22]ພຣະຄຣິດຊົງສະຖິດຢູ່ເບື້ອງຂວາພຣະຫັດຂອງພ
ພຣະອົງສະເດັດເຂົ້າໄປໃນສະຫວັນຝູງເທວະດາແລະບັນດາຜູ້
ມີອໍານາດແລະມີຣິດເດດທັງຫລາຍຊົງມອບໄວ້ໃຫ້ຢູ່ໃຕ້ອໍານາດຂອງພຣະອົງແລ້ວ.


generated on Tue Jun 17 19:01:42 2025

# 4

[1]ສະນັ້ນ, ໂດຍເຫດທີ່ພຣະຄຣິດເຈົ້າໄດ້ຊົງທົນທຸກທໍຣະມານໃນເນື້ອຫນັງ, ເພື່ອເຮົາທັງຫລາຍ ກໍຈົ່ງມີຄວາມຄິດຢ່າງດຽວກັນ.
ດ້ວຍເພາະວ່າຜູ້ທີ່ໄດ້ທົນທຸກທໍຣະມານໃນເນື້ອຫນັງກໍບໍ່ພົວພັນກັບບາບແລ້ວ.[2]ເພື່ອເຂົາຈະບໍ່ໄດ້ດໍາເນີນຊີວິດທີ່ຍັງເຫລືອຢູ່ໃນເນື້ອຫນັງ,
ຕາມໃຈປາຖະຫນາຂອງມະນຸດ, ແຕ່ຕາມນໍ້າພຣະທັຍ ຂອງພຣະເຈົ້າ.

[3]ດ້ວຍວ່າເວລາທີ່ຜ່ານໄປແລ້ວນັ້ນຫນ້າຈະພຽງພໍ ສໍາລັບການກະທໍາສິ່ງທີ່ຄົນຕ່າງຊາດມັກເຮັດນັ້ນຄື ດໍາເນີນຊີວິດຕາມຣາຄະຕັນຫາ,
ຕາມໃຈປາຖະຫນາອັນຊົ່ວຊ້າ, ດື່ມສຸຣານຶນເມົາກິນລ້ຽງກັນຢ່າງຫລູຫລາ ຟຸ່ມເຟືອຍ ແລະ ການຂາບໄຫວ້ຮູບເຄົາ ຣົບອັນເປັນທີ່ໜ້າລັງກຽດ.
[4]ເຂົາປະຫລາດໃຈທີ່ທ່ານທັງຫລາຍບໍ່ໄດ້ເຮັດການຊົ່ວຮ້າຍອັນ ເຫລືອລົ້ນເຫມືອນຢ່າງເຂົາ ແລະ ພວກເຂົາກໍກ່າວຮ້າຍໃສ່ທ່ານ.
[5]ຄົນເຫຼົ່ານັ້ນຈະຕ້ອງໃຫ້ການແກ່ພຣະອົງຜູ້ພ້ອມແລ້ວທີ່ຈະຊົງພິພາກສາທັງຄົນເປັນແລະຄົນຕາຍ.[6]ດ້ວຍເຫດນີ້ເອງຂ່າວປະເສີດ
ຈຶ່ງໄດ້ປະກາດແກ່ຄົນທີ່ຕາຍໄປແລ້ວດ້ວຍ ແມ່ນວ່າເຂົາໄດ້ຖືກຊົງພິພາກສາຕາມຢ່າງມະນຸດໃນເນື້ອຫນັງ
ແຕ່ຈະມີຊີວິດຕາມຢ່າງພຣະເຈົ້າໃນຝ່າຍຈິດວິນຍານ.
[7]ແຕ່ສິ່ງທັງປວງໃກ້ຈະເຖິງເວລາທີ່ສຸດແລ້ວ, ເຫດສະນັ້ນທ່ານທັງຫລາຍຈົ່ງສໍາແດງກິຣິຍາສະຫງ່ຽມຈຽມຕົວ ແລະ
ຈົ່ງເຝົ້າຣະວັງໃນການພາວັນນາອະທິຖານ.[8]ຍິ່ງກວ່າສິ່ງອື່ນໃດທັງຫມົດ, ຈົ່ງຮັກຊຶ່ງກັນ ແລະ
ກັນໃຫ້ຫລາຍຂຶ້ນດ້ວຍວ່າຄວາມຮັກກໍປິດບັງຄວາມຜິດບາບໄວ້ຢ່າງຫລວງຫລາຍ.[9]ທ່ານທັງຫລາຍຈົ່ງຕ້ອນຮັບລ້ຽງດູຊຶ່ງກັນ ແລະ
ກັນໂດຍບໍ່ຈົ່ມບໍ່ວ່າ.
[10]ຕາມທີ່ທຸກຄົນໄດ້ຮັບຂອງປະທານແລ້ວ, ກໍໃຫ້ຮັບໃຊ້ຕໍ່ກັນ ແລະກັນ.
ເຮັດເຊັ່ນນີ້ເປັນເຫມືອນຜູ້ຮັບໃຊ້ທີ່ດີສໍາລັບຂອງປະທານນາໆປະການທີ່ໄດ້ຮັບຈາກພຣະເຈົ້າ.[11]ຖ້າຜູ້ໃດຈະປະຕິບັດ,
ກໍໃຫ້ປະຕິບັດຕາມກໍາລັງຊຶ່ງພຣະເຈົ້າຊົງໂຜດປະທານນັ້ນເຮັດສິ່ງເຫລົ່ານີ້ໃນທຸກວິທີທາງເພື່ອວ່າພຣະເຈົ້າຈະຊົງໄດ້ຮັບກຽດໂດຍພຣະເຢຊູຄຣິດເຈົ້າ.
ຂໍພຣະສະຫງ່າຣາສີ ແລະ ຣິດທານຸພາບຈົ່ງມີແດ່ພຣະອົງສືບໆໄປເປັນນິດ ອາແມນ.
[12]ພີ່ນ້ອງທີ່ຮັກ, ຢ່າປະຫລາດໃຈ ທີ່ພວກເຈົ້າໄດ້ຮັບຄວາມທຸກຮ້ອນຢ່າງແສນ ສາຫັດເປັນການລອງໃຈ
ເຫມືອນກັບວ່າເປັນເຫດອັນແປກປະຫລາດ ເກີດຂຶ້ນກັບທ່ານ.[13]ແຕ່ຢ່າງໃດກໍຕາມທ່ານທັງຫລາຍ
ຈົ່ງຊົມຊື່ນຍິນດີໃນການທີ່ທ່ານໄດ້ມີສ່ວນຮ່ວມໃນຄວາມທຸກຍາກຂອງພຣະຄຣິດເຈົ້າ, ເພື່ອວ່າທ່ານທັງຫລາຍກໍຈະໄດ້ຊື່ນຊົມຍິນດີ ແລະ
ດີໃຈຢ່າງຫລວງຫລາຍດ້ວຍເມື່ອສະຫງ່າຣາສີຂອງພຣະອົງປາກົດຂຶ້ນ.[14]ຖ້າທ່ານຖືກດ່າວ່າເພາະພຣະນາມຂອງພຣະຄຣິດເຈົ້າ
ທ່ານກໍໄດ້ຮັບພຣະພອນເພາະພຣະວິນຍານແຫ່ງສະຫງ່າຣາສີ ແລະ ພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ກັບທ່ານ.
[15]ແຕ່ວ່າຢ່າໃຫ້ຜູ້ໃດໃນພວກທ່ານໄດ້ຮັບໂທດຖານະເປັນຜູ້ຂ້າຄົນ, ເປັນ ຂະໂມຍ, ເປັນຄົນທໍາຮ້າຍ,
ຫລືເປັນຄົນທີ່ທ່ຽວຫຍຸ້ງກ່ຽວກັບທຸຣະຂອງຄົນອື່ນ.[16]ແຕ່ຖ້າຜູ້ໃດໄດ້ຮັບທຸກເພາະເປັນຄຣິສະຕຽນ, ກໍຢ່າໃຫ້ຜູ້ນັ້ນມີຄວາມລະອາຍເລີຍ;
ແຕ່ໃຫ້ເຂົາຖວາຍພຣະກຽດນັ້ນແດ່ພຣະເຈົ້າເພາະຊື່ນັ້ນ.
[17]ເຖິງເວລາແລ້ວທີ່ການຊົງພິພາກສາຕ້ອງເລີ່ມຕົ້ນທີ່ຄົວວິຫານຂອງພຣະເຈົ້າ. ຖ້າຫາກເລີ່ມຕົ້ນກັບເຮົາ,
ສິ່ງຈະເປັນຜົນສໍາລັບຜູ້ທີ່ບໍ່ເຊື່ອຟັງຂ່າວປະເສີດເລື່ອງຂອງພຣະເຈົ້າຈະເປັນຢ່າງໃດ?[18]ແລະ ຖ້າ "ຄົນຊອບທັມຈະລອດພົ້ນໄປໄດ້ຢ່າງຍາກ
ແລ້ວຄົນອະທັມ ແລະ ຄົນຜິດບາບຈະໄປຢູ່ໃສ?[19]ເພາະສະນັ້ນຂໍໃຫ້ຜູ້ທີ່ທົນທຸກທໍຣະມານ
ຕາມພຣະປະສົງຂອງພຣະເຈົ້າຈົ່ງມອບຝາກຈິດວິນຍານຂອງພວກເຂົາໄວ້ກັບພຣະອົງຜູ້ຊົງສ້າງ ຜູ້ຊົງສັດຊື່ໃນການກະທໍາດີນັ້ນເທີ້ນ.


generated on Tue Jun 17 19:01:42 2025

5 [1]ຂ້າພະເຈົ້າຈຶ່ງຕັກເຕືອນບັນດາຜູ້ອາວຸໂສທັງຫລາຍ, ໃນຖານະທີ່ຂ້າພະເຈົ້າກໍເປັນຜູ້ອາວຸໂສຄົນຫນຶ່ງ. ຂ້າພະເຈົ້າເຊັ່ນກັນ
ເປັນພະຍານເຖິງຄວາມທຸກທໍຣະມານ ຂອງພຣະຄຣິດເຈົ້າ, ແລະ ມີສ່ວນທີ່ຈະຮັບສະຫງ່າຣາສີທີ່ຈະມາປາກົດພາຍຫລັງດ້ວຍ[2]ດັ່ງນັ້ນ,
ຂ້າພະເຈົ້າແນະນຳຜູ້ອາວຸໂສທັງຫລາຍວ່າ ຈົ່ງລ້ຽງຝູງແກະຂອງພຣະເຈົ້າທີ່ຢູ່ກັບທ່ານ. ຈົ່ງເອົາໃຈໃສ່ດູແລພວກເຂົາ,
ບໍ່ແມ່ນດ້ວຍຄວາມຝືນໃຈແຕ່ດ້ວຍຄວາມເຕັມໃຈຕາມພຣະປະສົງຂອງອົງພຣະຜູ້ເປັນເຈົ້າ. ຈົ່ງເອົາໃຈໃສ່ດູແລເຂົາບໍ່ແມ່ນ
ດ້ວຍເຫັນແກ່ຊັບສິ່ງຂອງອັນເປັນມົນທິນແຕ່ດ້ວຍຄວາມເຕັມໃຈ.[3]ຈົ່ງຢ່າປະພຶດຕົນເຫມືອນ
ເປັນເຈົ້ານາຍທີ່ມີອຳນາດເຫນືອຄົນເຫລົ່ານັ້ນທີ່ພວກທ່ານດູແລແຕ່ຈົ່ງເປັນແບບຢ່າງອັນດີແກ່ຝູງແກະນັ້ນ.[4]ແລະ ເມື່ອພຣະຜູ້ລ້ຽງອົງຍິ່ງໃຫຍ່
ຈະສະເດັດມາປາກົດທ່ານທັງຫລາຍຈະໄດ້ຮັບ ມົງກຸດອັນຊົງສະຫງ່າຣາສີທີ່ບໍ່ມີວັນຫ່ຽວແຫ້ງ.

[5]ໃນທຳນອງດຽວກັນທ່ານ, ຜູ້ມີອາຍຸອ່ອນກວ່າ, ຈົ່ງຍອມຟັງຜູ້ອາວຸໂສ. ໃຫ້ທ່ານທຸກຄົນຈົ່ງສວມຄວາມຖ່ອມໃຈ ແລະ ຮັບໃຊ້ຊຶ່ງກັນ ແລະກັນ.
ດ້ວຍວ່າ ພຣະເຈົ້າຊົງຕໍ່ສູ້ຄົນເຫລົ່ານັ້ນທີ່ຖືຕົວຈອງຫອງ,
ແຕ່ພຣະອົງຊົງປຣະທານພຣະຄຸນແກ່ຄົນທັງຫລາຍທີ່ຖ່ອມໃຈລົງ."[6]ເຫດສະນັ້ນທ່ານທັງຫລາຍຈົ່ງຖ່ອມໃຈລົງຢູ່ພາຍໃຕ້ພຣະຫັດອັນຊົງຣິດຂອງພຣະເຈົ້າເພື່ອພຣະ
[7]ຈົ່ງປະຄວາມກະວົນກະວາຍຂອງທ່ານໄວ້ກັບພຣະອົງ ເພາະວ່າພຣະອົງຊົງຫ່ວງໃຍທ່ານທັງຫລາຍ.
[8]ທ່ານທັງຫລາຍຈົ່ງເປັນຄົນໃຈຫນັກແຫນ້ນຈົ່ງຣະວັງຕົວແລະເຝົ້າຢູ່. ດ້ວຍວ່າ,
ສັດຕຣູຂອງທ່ານຄືມານຫຽວວົນວຽນຢູ່ຮອບໆດັ່ງສິງໂຕທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້.[9]ຈົ່ງຕໍ່ສູ້ກັບສັດຕຣູນັ້ນດ້ວຍຕັ້ງໃຈ
ຫມັ້ນຄົງໃນຄວາມເຊື່ອຂອງທ່ານ ໆ ຮູ້ແລ້ວວ່າບັນດາພີ່ນ້ອງຂອງທ່ານທົ່ວໂລກກໍກຳລັງປະສົບ ກັບຄວາມທຸກລຳບາກຢ່າງດຽວກັນນີ້.
[10]ທ່ານທັງຫລາຍໄດ້ທົນທຸກຊົ່ວໄລຍະຫນຶ່ງ, ແລ້ວພຣະເຈົ້າຜູ້ຊົງພຣະຄຸນທັງປວງ,
ຜູ້ໄດ້ຊົງເອີ້ນທ່ານໃຫ້ເຂົ້າໃນສະຫງ່າຣາສີອັນຕະຫລອດໄປໃນພຣະຄຣິດເຈົ້າ, ຈະຊົງໂຜດເສີມສ້າງທ່ານໃຫ້ຕັ້ງຂຶ້ນໃໝ່ ແລະ ໃຫ້ມີກຳລັງຂຶ້ນ.
ແລະ ຊົງບັນດານໃຫ້ທ່ານມີຄວາມສົມບູນ.[11]ຣິດທານຸພາບຈົ່ງມີ ແດ່ພຣະອົງຕະຫລອດໄປເປັນນິດເຖີ້ນ ອາແມນ.
[12]ຂ້າພະເຈົ້າຖືວ່າຊີລາ ເປັນພີ່ນ້ອງທີ່ສັດຊື່ຄົນຫນຶ່ງ, ແລະ ຂ້າພະເຈົ້າໄດ້ຂຽນຈົດໝາຍສັ້ນໆຜ່ານທາງເຂົາ. ຂ້າພະເຈົ້າເຕືອນສະຕິ ແລະ
ເປັນພະຍານແກ່ທ່ານທັງຫລາຍວ່າສິ່ງທີ່ຂ້າພະເຈົ້າຂຽນເປັນພຣະຄຸນທີ່ແທ້ຈິງຂອງພຣະເຈົ້າ. ຈົ່ງຕັ້ງໝັ້ນຄົງຢູ່ໃນພຣະຄຸນນັ້ນ.
[13]ຜູ້ຍິງທີ່ຢູ່ເມືອງບາບີໂລນ, ຜູ້ຊຶ່ງຊົງເລືອກໄວ້ເຊັ່ນດຽວກັນກັບທ່ານທັງຫລາຍຝາກຄວາມຄິດເຖິງມາຍັງທ່ານແລະ ມາຣະໂກ,
ລູກຊາຍຂອງຂ້າພະເຈົ້າກໍຝາກຄວາມຄິດເຖິງມາຍັງທ່ານດ້ວຍ.[14]ຈົ່ງທັກທາຍກັນດ້ວຍທຳນຽມຈູບ
ທີ່ສະແດງເຖິງຄວາມຮັກຕໍ່ກັນຂໍສັນຕິສຸກຈົ່ງດຳຣົງຢູ່ກັບທ່ານທັງຫລາຍທີ່ຢູ່ ໃນພຣະຄຣິດເຖີ້ນ ອາແມນ.

# 2 ເປໂຕ

1 [1]ຊີໂມນ ເປໂຕ, ຜູ້ຮັບໃຊ້ ແລະ ອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ. ຮຽນທ່ານຜູ້ທີ່ໄດ້ຮັບຄວາມເຊື່ອ
ທີ່ມີຄ່າເຊັ່ນດຽວກັບທີ່ເຮົາໄດ້ຮັບຄືຄວາມເຊື່ອໃນຄວາມຊອບທຳຂອງພຣະເຈົ້າ ແລະ ພຣະເຢຊູຄຣິດເຈົ້າພຣະຜູ້ໂຜດໃຫ້ພົ້ນຂອງເຮົາ.
[2]ຂໍພຣະຄຸນຈົ່ງຢູ່ກັບທ່ານ ແລະ ສັນຕິສຸກ ຈົ່ງເພີ່ມທະວີຄູນແກ່ເຈົ້າທັງຫລາຍ ໂດຍຮູ້ຈັກພຣະເຈົ້າ ແລະ
ພຣະເຢຊູເຈົ້າອົງພຣະຜູ້ເປັນເຈົ້າຂອງພວກເຮົາ.

[3]ທຸກສິ່ງທີ່ກຽວກັບອຳນາດຂອງພຣະເຈົ້າສຳລັບຊີວິດ ແລະ ຄວາມດີທີ່ເຮົາໄດ້ຮັບຈາກຄວາມຮູ້ຂອງອົງພຣະຜູ້ເປັນເຈົ້າ,
ຜູ້ທີ່ຊົງເອີ້ນເຮົາຜ່ານທາງພຣະສະຫງ່າຣາສີ ແລະ ຄວາມຊອບທຳຂອງພຣະອົງເອງ.[4]ຜ່ານສິ່ງເຫຼົ່ານີ້ພຣະອົງຈຶ່ງໄດ້ຊົງປະທານ
ພຣະສັນຍາອັນປະເສີດ ແລະ ໃຫຍ່ຫລວງແກ່ເຮົາ, ພຣະອົງເຮັດແບບນີ້ ເພື່ອວ່າທ່ານອາດເປັນຜູ້ແບ່ງປັນໃນສະ
ພາບອັນສັກສິດເມື່ອທ່ານຫລີກໜີຈາກຄວາມເສື່ອມໂຊມທີ່ມີຢູ່ໃນໂລກນີ້ ເພາະຄວາມປາຖະຫນາຂອງຄົນຊົ່ວ.
[5]ດ້ວຍເຫດນີ້ຈົ່ງເຮັດດີທີ່ສຸດ, ເພື່ອເພີ່ມຄຸນຄວາມດີຜ່ານຄວາມເຊື່ອ ແລະ ເພີ່ມຄຸນຄວາມດີຜ່ານຄວາມຮູ້.[6]ຜ່ານຄວາມຮູ້ຂອງທ່ານ
ຈົ່ງເພີ່ມການຮູ້ຈັກບັງຄັບຕົນ ແລະ ຜ່ານການບັງຄັບຕົນ, ຈົ່ງເພີ່ມຄວາມອົດທົນ ແລະ ຜ່ານຄວາມອົດທົນ
ຈົ່ງເພີ່ມຄວາມດີງາມ[7]ຜ່ານຄວາມດີງາມ, ຈົ່ງເພີ່ມຄວາມຮັກສັນພີ່ນ້ອງ ຜ່ານຄວາມຮັກສັນພີ່ນ້ອງ ເພີ່ມຄວາມເຫຼື້ອມໃສໃນພຣະເຈົ້າ.
[8]ຖ້າສິ່ງເຫລົ່ານີ້ມີຢູ່ໃນຕົວທ່ານ ແລະ ເຕີບໂຕຢູ່ໃນຕົວທ່ານໆຈະບໍ່ເປັນຫມັນຫລືບໍ່ເກີດຜົນໃນຄວາມຮູ້ຂອງອົງພຣະເຢຊູຄຣິດເຈົ້າ.
[9]ແຕ່ຜູ້ໃດທີ່ຂາດສິ່ງເຫຼົ່ານີ້ຈະເຫັນສະເພາະສິ່ງທີ່ຢູ່ໃກ້. ເຂົາກໍເປັນຄົນຕາບອດ,
ລືມໄປວ່າຕົນໄດ້ຮັບການຊຳຣະລ້າງຈາກຄວາມຜິດບາບເມື່ອກ່ອນຂອງເຂົາແລ້ວ.
[10]ເພາະສະນັ້ນພີ່ນ້ອງທັງຫລາຍ, ຈົ່ງເຮັດດີທີ່ສຸດ ເພື່ອໃຫ້ການຊົງເອີ້ນ ແລະ ຊົງເລືອກຂອງທ່ານ ໃຫ້ເປັນທີ່ແນ່ໃຈສຳລັບຕົວເອງ.
ຖ້າທ່ານເຮັດສິ່ງເລົ່ານີ້ ທ່ານຈະບໍ່ສະດຸດລົ້ມລົງ.[11]ດ້ວຍວ່າຢ່າງນັ້ນທ່ານທັງຫລາຍຈະມີສິດສົມບູນ
ທີ່ຈະເຂົ້າໄປໃນຣາຊແຜ່ນດິນອັນນິຣັນດອນຂອງພຣະເຈົ້າ ແລະ ພຣະເຢຊູຄຣິດເຈົ້າ ພຣະຜູ້ຊົງໂຜດໃຫ້ພົ້ນຂອງເຮົາ
ຈະປະທານຄວາມສົມບູນໃຫ້ທ່ານ.
[12]ເຫດສະນັ້ນ ຂ້າພະເຈົ້າພ້ອມທີ່ຈະເຕືອນສະຕິທ່ານ ເຖິງສິ່ງເຫລົ່ານີ້ແມ່ນວ່າທ່ານຮູ້ຈັກ ແລະ
ເຖິງແມ່ນວ່າທ່ານຕັ້ງຫມັ້ນຄົງຢູ່ໃນຄວາມຈິງທີ່ມີຢູ່ແລ້ວໃນຂະນະນີ້.[13]ຂ້າພະເຈົ້າຄິດວ່າເປັນທີ່ເຫມາະສົມສຳລັບຂ້າພ
ະເຈົ້າທີ່ຈະເຕືອນສະຕິທ່ານທັງຫລາຍ ໃຫ້ລະນຶກເຖິງຂໍ້ຄວາມເຫຼົ່ານີ້. ເທົ່າທີ່ຂ້າພະເຈົ້າຍັງອາໃສຢູ່ໃນຮ່າງກາຍນີ້.
[14]ເພາະຂ້າພະເຈົ້າຮູ້ວ່າອີກບໍ່ດົນ ຂ້າພະເຈົ້າກໍຈະປະຖິ້ມຮ່າງກາຍຂອງຂ້າພະເຈົ້າໄປ ດັ່ງທີ່ອົງພຣະເຢຊູຄຣິດເຈົ້າ
ອົງເປັນພຣະຜູ້ເປັນເຈົ້າຂອງເຮົາໄດ້ຊົງສຳແດງແກ່ຂ້າພະເຈົ້າແລ້ວ.[15]ຍິ່ງຂ້າພະເຈົ້າຈະກະທຳຢ່າງດີທີ່ສຸດໃຫ້ທ່ານທັງຫລາຍ
ລະນຶກເຖິງສິ່ງເຫຼົ່ານີ້ສະເຫມີເມື່ອຂ້າພະເຈົ້າຈາກໂລກນີ້ໄປແລ້ວ.
[16]ເພາະວ່າເຮົາບໍ່ໄດ້ກ່າວຕາມນິຍາຍທີ່ເຂົາແຕ່ງໄວ້ດ້ວຍຄວາມສະຫລຽວສະຫລາດເມື່ອເຮົາໄດ້ບອກແກ່ທ່ານເຖິງຣິດເດດ ແລະ
ການສະເດັດມາຂອງອົງພຣະເຢຊູຄຣິດເຈົ້າອົງພຣະຜູ້ເປັນເຈົ້າຂອງເຮົາ ແຕ່ເຮົາໄດ້ເຫັນເດຊານຸພາບ ຂອງພຣະອົງດ້ວຍຕາຂອງເຮົາເອງ.

[17]ພຣະອົງໄດ້ຊົງຮັບກຽດ ແລະ ສະຫງ່າຣາສີຈາກ ພຣະເຈົ້າພຣະບິດາເຈົ້າ ເມື່ອພຣະສຸຣະສຽງຈາກຣັດສະໝີ
ອັນຍິ່ງໃຫຍ່ໄດ້ມາເຖິງພຣະອົງຊົງກ່າວແກ່ພຣະອົງວ່າ, “ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ ເຮົາພໍໃຈທ່ານຜູ້ນີ້ຫລາຍ.”[18]ແລະ ເຮົາກໍໄດ້ຍິນ
ພຣະສຸຣະສຽງນີ້ຈາກສະຫວັນໃນຄັ້ງທີ່ເຮົາໄດ້ຢູ່ກັບພຣະອົງທີ່ພູເຂົາອັນສັກສິດນັ້ນ.
[19]ມີຄຳທຳນວາຍທີ່ແນ່ນອນຍິ່ງກວ່ານັ້ນອີກ
ຈະເປັນການດີຖ້າທ່ານທັງຫລາຍຈະຖືຕາມຄຳທຳນວຍນັ້ນເໝືອນແສງໂຄມທີ່ສ່ອງສະຫວ່າງໃນບ່ອນມືດຈົນເຖິງວັນຮຸ່ງເຊົ້າຈະຂຶ້ນ ແລະ
ດາວເພັກຈະສ່ອງຂຶ້ນໃນໃຈຂອງທ່ານທັງຫລາຍ.[20]ຈົ່ງຮູ້ ແລະ ເຂົ້າໃຈໃນສິ່ງນີ້
ຄືວ່າບໍ່ມີຄຳທຳນວາຍໃດທີ່ຕີຄວາມໝາຍໄດ້ຕາມລຳພັງໃຈຂອງຕົວເອງ.[21]ບໍ່ມີຄຳທຳນວາຍທີ່ເຄີຍມາຈາກຄວາມປະສົງຂອງມະນຸດ
ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າໂດຍພຣະວິນຍານບໍຣິສຸດເຈົ້າໄດ້ກ່າວຈາກພຣະເຈົ້າ.


generated on Tue Jun 17 19:01:42 2025

2 [1]ແຕ່ວ່າໄດ້ມີຜູ້ທຳນວາຍປອມໄດ້ມາຍັງປະຊາຊົນ, ແລະ ເຊັ່ນດຽວກັບຈະມີຄູສອນປອມຈະມາທ່າມກາງທ່ານທັງຫລາຍ.
ຜູ້ຊຶ່ງຈະແອບເອົາຄຳສອນບໍ່ຈິງທີ່ເປັນການທຳລາຍ, ອັນຈະນຳໄປສູ່ຄວາມຈິບຫາຍເຂົ້າມາດ້ວຍ ແລະ ຈະປະຕິເສດອົງພຣະຜູ້ເປັນເຈົ້າ
ທີ່ໄດ້ຊົງໄຖ່ເຂົາໄວ້ ແລະ ຈະນຳຄວາມຈິບຫາຍມາເຖິງຕົວເອງໂດຍໄວ.[2]ຈະມີຫລາຍຄົນປະຕິບັດຕາມທາງແຫ່ງການຊົ່ວສາບແຊ່ງຂອງເຂົາ.
ແລະ ເພາະຄົນເຫຼົ່ານັ້ນເປັນເຫດ ທາງຂອງຄວາມຈິງຈະຖືກປະຫມາດ.[3]ແລະ ດ້ວຍຄວາມໂລບເຂົາຈະກ່າວຄຳຕົວະ
ເພື່ອຄ້າກຳໄລຈາກທ່ານທັງຫລາຍ. ການລົງໂທດຄົນເຫຼົ່ານັ້ນທີ່ໄດ້ຖືກ ພິພາກສາດົນນານມາແລ້ວກໍບໍ່ເສີຍຊ້າ ແລະ
ຄວາມຈິບຫາຍຂອງເຂົາກໍຈະບໍ່ ລືມໄລພວກເຂົາ.

[4]ເພາະວ່າ ພຣະເຈົ້າບໍ່ໄດ້ຊົງຍົກເວັ້ນຝູງເທວະດາທີ່ໄດ້ເຮັດບາບນັ້ນ. ແຕ່ໄດ້ຊົງຊຸກພວກເຂົາລົງໄປສູ່ນາຣົກ ແລະ
ໄດ້ມັດເຂົາໄວ້ດ້ວຍເຄື່ອງຈອງຈຳ ແຫ່ງຄວາມມືດ ຄຸມໄວ້ຈົນກວ່າຈະເຖິງເວລາຊົງພິພາກສາ.[5]ພຣະອົງກໍບໍ່ໄດ້ຊົງຍົກເວັ້ນ
ມະນຸດສະໂລກຄາວບູຮານແຕ່ໄດ້ຊົງຊ່ວຍໂນອາ ຜູ້ປະກາດຄວາມຊອບທຳ ກັບຄົນອື່ນອີກເຈັດຄົນໃຫ້ລອດ.
ເມື່ອຄາວທີ່ພຣະອົງໄດ້ຊົງບັນດານໃຫ້ນ້ຳຖ້ວມໂລກຂອງຄົນອະທຳ.[6]ດັ່ງນັ້ນພຣະເຈົ້າໄດ້ຊົງລົງໂທດເມືອງໂຊໂດມ ແລະ ເມືອງໂກໂມຣາ
ໃຫ້ພິນາດເປັນເຖົ່າຖ່ານ ເພື່ອໃຫ້ເປັນຕົວຢ່າງ ແກ່ຄົນທົ່ວໄປທີ່ຈະປະພຶດຊົ່ວ.
[7]ແຕ່ໄດ້ຊົງຊ່ວຍໂລດຜູ້ຊອບທຳນັ້ນໃຫ້ພົ້ນ, ຄືຜູ້ມີຄວາມທຸກໃຫຍ່ຫລວງ ເພາະການກະທຳຂາດສິນທຳຂອງຄົນຊົ່ວເຫຼົ່ານັ້ນ,
ພຣະເຈົ້າກໍຊ່ວຍເຂົາໃຫ້ລອດພົ້ນ.[8]ດ້ວຍວ່າຄົນຊອບທຳນັ້ນ, ຊຶ່ງໄດ້ອາໃສຢູ່ໃນທ່າມກາງ ເຂົາເຫລົ່ານັ້ນເມື່ອທ່ານໄດ້ເຫັນ ແລະ ໄດ້ຍິນຈິດໃຈທີ່
ຊອບທຳຂອງທ່ານກໍເປັນທຸກເປັນຮ້ອນທຸກໆວັນ.
ເພາະການປະພຶດຊົ່ວຂອງຄົນເຫລົ່ານັ້ນ[9]ອົງພຣະຜູ້ເປັນເຈົ້າຊົງຮູ້ຈັກວິທີທີ່ຈະຊ່ວຍຄົນທີ່ເຮັດຕາມທາງຂອງພຣະເຈົ້າໃຫ້ລອດພົ້ນຈາກການທົດລອງຕ່າງໆ,
ແລະ ຊົງຮູ້ວິທີທີ່ຈະຮັກສາຄົນອະທຳໄວ້ຈົນເຖິງວັນພິພາກສາ ເພື່ອຈະໄດ້ລົງໂທດເຂົາ.
[10]ໂດຍສະເພາະຄົນເຫຼົ່ານັ້ນທີ່ປ່ອຍຕົວ ໄປຕາມເນື້ອຫນັງໃນກິເລດຕັນຫາ ແຫ່ງຄວາມສົກກະປົກ ແລະ ຫມິ່ນປະຫມາດຜູ້ໃຫຍ່ທີ່ມີອຳນາດ
ຄົນເຫຼົ່ານີ້ມີໃຈ ກ້າກັນ ແລະ ເຮັດຕາມລຳພັງໃຈ ເຂົາບໍ່ສະທ້ານຕົກໃຈ ທີ່ຈະກ່າວປະນາມຜູ້ທີ່ມີສັກສີ.[11]ຝ່າຍເທວະດາທີ່ມີຣິດກຳລັງຫລາຍກວ່າ,
ແຕ່ກໍບໍ່ໄດ້ກ່າວປະນາມຄົນເຫຼົ່ານັ້ນຕໍ່ອົງພຣະຜູ້ເປັນເຈົ້າ.
[12]ແຕ່ຄົນເຫຼົ່ານັ້ນເປັນເຫມືອນສັດເດຍລະສານທີ່ບໍ່ມີຄວາມຄິດ ທີ່ຖືກສ້າງມາ ເພື່ອຖືກຈັບ ແລະ ຖືກຂ້າ. ເຂົາກ່າວປະນາມສິ່ງທີ່ເຂົາບໍ່ເຂົ້າໃຈ
ເລີຍເຂົາຈະຕ້ອງ ຈິບຫາຍໃນການຊົ່ວຮ້າຍຂອງຕົນເອງ.[13]ພວກເຂົາຮັບບຳເນັດແຫ່ງການອະທຳ ເຫມືອນຄົນທີ່ຖືເອົາການຫລິ້ນ
ມ່ວນຊື່ນເຮຮາໃນເວລາກາງເວັນເປັນຄວາມເພີດເພີນ. ເຂົາດ່າງພ້ອຍ ແລະ ປະພຶດການມ່ວນຊື່ນເຮຮາດ້ວຍການຫລອກລວງ
ຂອງຕົນເອງເມື່ອກຳລັງກິນລ້ຽງຮ່ວມກັບທ່ານທັງຫລາຍ.[14]ຕາຂອງເຂົາເຕັມໄປດ້ວຍຄວາມປາຖະຫນາແຫ່ງການບາບ ແລະ
ເຂົາຢຸດການເຮັດບາບບໍ່ໄດ້ເລີຍ, ເຂົາວາງກັບດັກຄົນທີ່ມີໃຈບໍ່ໝັ້ນຄົງ. ເຂົາມີໃຈຊິນເຄີຍກັບການໂລບ, ເຂົາເປັນລູກແຫ່ງການສາບແຊ່ງ!
[15]ເຂົາໄດ້ປະຖິ້ມທາງຖືກຕ້ອງ. ເຂົາໄດ້ຫລົງໄປໃນທາງຜິດ, ແລະ ເຂົາໄດ້ດຳເນີນຕາມທາງຂອງບາລາອາມ ລູກຊາຍເບອໍ,
ຜູ້ທີ່ຊອບບຳເນັດແຫ່ງການອະທັມ.[16]ແຕ່ບາລາອາມ ກໍໄດ້ຖືກຕິເພາະການກະທຳຄວາມຊົ່ວຊ້າ. ລໍໃບ້ໂຕນັ້ນປາກເປັນພາສາມະນຸດ ແລະ
ໄດ້ຢັບຢັ້ງອາການບ້າຂອງ ບາລາອາມຜູ້ທຳນວາຍນັ້ນໃຫ້ເຊົາ.
[17]ຄົນເຫຼົ່ານີ້ເປັນບໍ່ນ້ຳພຸທີ່ຂາດນ້ຳ ເປັນເມກທີ່ຖືກລົມພະຍຸພັດໄປ. ພວກເຂົາເປັນດັ່ງຫມອກ
ແຫ່ງຄວາມມືດທຶບທີ່ກຽມໄວ້ແລ້ວສຳລັບຄົນເຫລົ່ານັ້ນ.[18]ເພາະວ່າພວກເຂົາກ່າວຄຳອວດອ້າງ.
ພວກເຂົາຫລອກລວງຜູ້ຄົນດ້ວຍຕັນຫາແຫ່ງເນື້ອຫນັງ. ພວກເຂົາຊັກຊວນຜູ້ທີ່ພະຍາຍາມໜີຈາກຄົນເຫລົ່ານັ້ນທີ່ຫລົງປະພຶດຜິດ.
[19]ພວກເຂົາສັນຍາວ່າຈະໃຫ້ຄົນເຫຼົ່ານັ້ນເປັນອິດສະຫລະ ແຕ່ຕົວພວກເຂົາເອງຍັງເປັນທາດຂອງຄວາມເສື່ອມໂຊມ. ເພາະວ່າ
ມະນຸດເປັນທາດຂອງສິ່ງທີ່ຄອບງຳເຂົາ.
[20]ຜູ້ໃດຫນີຈາກກິເລດຕັນຫາຂອງໂລກນີ້ ດ້ວຍຄວາມຮູ້ຂອງພຣະເຈົ້າ ແລະ ພຣະເຢຊູຄຣິດເຈົ້າ ພຣະຜູ້ຊ່ວຍໃຫ້ພົ້ນ, ແລະ
ເຂົາກັບໄປກ່ຽວຂ້ອງ ພ່າຍແພ້ແກ່ການຊົ່ວນັ້ນອີກ, ບັ້ນປາຍຂອງເຂົາ ກໍກັບກາຍຊົ່ວຮ້າຍຍິ່ງກວ່າຕອນຕົ້ນ.
[21]ເພາະວ່າຖ້າເຂົາບໍ່ໄດ້ຮູ້ຈັກທາງຊອບທັມ ນັ້ນເສັຍເລີຍກໍຍັງຈະດີກວ່າ ທີ່ເຂົາໄດ້ຮູ້ແລ້ວ ແຕ່ກັບຫັນຫລັງໃຫ້ກົດບັນຍັດອັນສັກສິດ
ທີ່ໄດ້ຊົງໂຜດປະທານໃຫ້ແກ່ເຂົານັ້ນ.[22]ຄຳສຸພາສິດນີ້ ຊຶ່ງເປັນຄວາມຈິງສຳລັບພວກເຂົາວ່າ: "ໝາໄດ້ຫລົບໄປກິນສິ່ງທີ່ມັນຮາກອອກມາແລ້ວ"
ແລະ "ໝູທີ່ໄດ້ຊຳຮະລ້າງຕົວແລ້ວ ກໍກັບລົງໄປນອນລຸຍໃນບວກອີກ."

3 [1]ບັດນີ້, ພວກທີ່ຮັກ ນີ້ເປັນຈົດໝາຍສະບັບທີສອງ ທີ່ຂ້າພະເຈົ້າໄດ້ຂຽນມາເຖິງທ່ານທັງຫລາຍ,
ເປັນເຄື່ອງເຕືອນໃຈໃຫ້ສະຖິດໃຈອັນບໍຣິສຸດຂອງທ່ານ.[2]ເພື່ອທ່ານທັງຫລາຍຈະໄດ້ໃສ່ໃຈຖ້ອຍຄຳທັງຫຼາຍທີ່ພວກຜູ້ທຳນວາຍ
ຜູ້ບໍຣິສຸດໄດ້ກ່າວໄວ້ເມື່ອກ່ອນ ແລະ ຄຳສັ່ງຂອງອົງພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ພົ້ນຜ່ານທາງພວກອັກຄະສາວົກຂອງທ່ານ.

[3]ກ່ອນອື່ນຈົ່ງຮູ້ຂໍ້ນີ້ ຄືໃນວັນສຸດທ້າຍ ຄົນທີ່ມັກເຢາະເຢີ້ຍຈະເກີດຂຶ້ນ ແລະດຳເນີນຕາມໃຈປາຖະໜາຊົ່ວຂອງຕົນ.[4]ພວກເຂົາຈະຖາມວ່າ,
"ຄຳທີ່ຊົງ ສັນຍາໄວ້ວ່າ ພຣະອົງຈະສະເດັດມານັ້ນຢູ່ໃສ? ເພາະວ່າຕັ້ງແຕ່ບັນພະບຸລຸດລ່ວງລັບໄປແລ້ວ
ສິ່ງທັງປວງກໍເປັນຢູ່ເຫມືອນໄດ້ເປັນຢູ່ຕັ້ງແຕ່ເລີ່ມຕົ້ນຊົງສ້າງໂລກ."
[5]ພວກເຂົາລືມຂໍ້ນີ້ເສຍ ດ້ວຍພຣະທັມຂອງພຣະເຈົ້າ ຟ້າສະຫວັນຈຶ່ງໄດ້ມີຢູ່ຕັ້ງແຕ່ບູຮານ ແລະ ແຜ່ນດິນໂລກຈຶ່ງໄດ້ບັງເກີດຂຶ້ນ, ແລະ
ແຍກອອກຈາກນ້ຳ ແລະ ເມື່ອນານມາແລ້ວໂດຍຄຳສັ່ງຂອງພຣະເຈົ້າ,[6]ແລະ
ໂດຍເຫດເຫລົ່ານັ້ນໃນເວລານັ້ນໂລກຈຶ່ງໄດ້ຖືກທຳລາຍດ້ວຍນ້ຳຖ້ວມ.[7]ແຕ່ວ່າບັດນີ້ ທ້ອງຟ້າອາກາດ ແລະ ແຜ່ນດິນໂລກ ທີ່ມີຢູ່ໃນປະຈຸບັນນີ້
ພຣະອົງຊົງຮັກສາໄວ້ ໂດຍຄຳສັ່ງດຽວກັນນັ້ນ. ຄືຊົງເກັບຮັກສາໄວ້ ສຳລັບວັນຊົງພິພາກສາ ແລະ ການທຳລາຍບັນດາຄົນອະທັມ.
[8]ແຕ່ພວກທີ່ຮັກຢ່າລືມຂໍ້ນີ້, ຄືວັນດຽວຂອງອົງພຣະຜູ້ເປັນເຈົ້າ ເປັນເໝືອນກັບພັນປີ ແລະ ພັນປີກໍເປັນເຫມືອນກັບວັນດຽວ.[9]ອົງພຣະຜູ້ເປັນເຈົ້າ
ບໍ່ໄດ້ຊົງເສີຍຊ້າ ໃນເລື່ອງພຣະສັນຍາຂອງພຣະອົງ, ຕາມທີ່ບາງຄົນຄິດນັ້ນ. ແຕ່ພຣະອົງໄດ້ຊົງອົດກັ້ນພຣະໄທໄວ້ ເພາະເຫັນແກ່ເຮົາທັງຫຼາຍ.
ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ໃດຜູ້ຫນຶ່ງຈິບຫາຍເລີຍ, ແຕ່ຊົງປາຖະໜາທີ່ຈະໃຫ້ຄົນທັງປວງກັບໃຈເສັຍໃຫມ່.
[10]ແນວໃດກໍຕາມ, ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງເຫມືອນດັ່ງຂະໂມຍມາ: ຟ້າສະຫວັນຜ່ານໄປດ້ວຍສຽງດັງກ້ອງສະຫນັ່ນ.
ໂລກທາດຈະຖືກເຜົາໃຫມ້ດ້ວຍໄຟ, ແລະ ແຜ່ນດິນໂລກ ກັບການງານທັງປວງທີ່ມີຢູ່ຈະຖືກເປີດເຜີຍ.
[11]ເມື່ອເຫັນແລ້ວວ່າສິ່ງທັງປວງຈະຕ້ອງຖືກທຳລາຍໄປຫມົດເຊັ່ນນີ້, ທ່ານທັງຫລາຍຄວນຈະເປັນຄົນຢ່າງໃດ? ທ່ານຄວນດຳເນີນໃນຊີວິດທີ່ບໍຣິສຸດ
ແລະ ນັບຖືພຣະເຈົ້າ.[12]ທ່ານຄວນຄອຍຖ້າ ແລະ ເຮັ່ງຮີບສຳລັບວັນຂອງພຣະເຈົ້າມາເຖິງ. ໃນວັນນັ້ນ, ຟ້າສະຫວັນ ຈະຖືກທຳລາຍດ້ວຍໄຟ ແລະ
ໂລກທາດຈະລະລາຍໄປດ້ວຍໄຟອັນຮ້ອນຍິ່ງ.[13]ແຕ່ວ່າຕາມພຣະສັນຍາ ຂອງພຣະອົງນັ້ນເຮົາຈຶ່ງຄອຍຖ້າຟ້າສະຫວັນໃຫມ່ ແລະ
ແຜ່ນດິນໂລກໃຫມ່, ທີ່ຊຶ່ງຄວາມຊອບທຳຈະດຳລົງຢູ່.
[14]ສະນັ້ນ, ທ່ານທີ່ຮັກ, ເມື່ອທ່ານທັງຫລາຍກຳລັງຄອຍສິ່ງເຫລົ່ານີ້ຢູ່, ທ່ານກໍຈົ່ງອົດສາພະຍາຍາມ
ໃຫ້ພຣະອົງຊົງພົບທ່ານທັງຫລາຍຢູ່ເປັນສຸກປັດສະຈາກມົນທິນ ແລະ ຂໍ້ຕຳໜິ.[15]ນອກຈາກນີ້,
ຈົ່ງພິຈາລະນາຄວາມອົດກັ້ນພຣະໄທໄວ້ດົນນານຂອງອົງພຣະຜູ້ເປັນເຈົ້າຂອງເຮົາ, ເພື່ອໂຜດເຮົາໃຫ້ລອດພົ້ນເຊັ່ນດຽວກັບໂປໂລ
ນ້ອງທີ່ຮັກຂອງເຮົາໄດ້ຂຽນເຖິງທ່ານ, ດ້ວຍສະຕິປັນຍາທີ່ໄດ້ຊົງໂຜດປະທານແກ່ທ່ານນັ້ນ.
[16]ໂປໂລໄດ້ເວົ້າສິ່ງເຫລົ່ານີ້ໄວ້ໃນຈົດໝາຍຂອງເຂົາທຸກສະບັບ, ຊຶ່ງໃນຈົດໝາຍນັ້ນມີບາງຂໍ້ທີ່ເຂົ້າໃຈຍາກ. ຊຶ່ງຄົນທັງຫລາຍທີ່ບໍ່ໄດ້ຮຽນຮູ້ ແລະ
ບໍ່ແນ່ນອນຫມັ້ນຄົງນັ້ນ ໄດ້ປ່ຽນແປງສິ່ງເຫລົ່ານີ້, ເຫມືອນເຂົາໄດ້ປ່ຽນແປງຂໍ້ອື່ນໆ ໃນພຣະຄຳພີ, ຈຶ່ງເປັນເຫດໃຫ້ຕົນເອງຈິບຫາຍໄປ.
[17]ເພາະເຫດນັ້ນ, ທ່ານທີ່ຮັກເມື່ອທ່ານທັງຫລາຍຮູ້ເລື່ອງນີ້, ກໍຈົ່ງລະວັງໃຫ້ດີ
ເພື່ອທ່ານຈະບໍ່ຖືກເຮັດໃຫ້ຫລົງຜິດຕາມການຫລອກລວງຂອງຄົນທີ່ຂາດສິນທັມ ແລະ ທ່ານທັງຫລາຍຈະສູນເສັຍຄວາມສັດຊື່ຂອງທ່ານເອງ.
[18]ແຕ່ທ່ານຈົ່ງຈະເລີນຂຶ້ນໃນພຣະຄຸນ ແລະ ໃນຄວາມຮູ້ຂອງອົງພຣະຜູ້ເປັນເຈົ້າ ແລະ ພຣະເຢຊູຄຣິດເຈົ້າພຣະຜູ້ໂຜດໃຫ້ພົ້ນຂອງເຮົາ.
ຂໍສະຫງ່າລາສີຈົ່ງມີແດ່ພຣະອົງທັງໃນປະຈຸບັນນີ້ ແລະ ຕະຫລອດໄປເປັນນິດ. ອາແມນ!

# 1 ໂຢຮັນ

1 [1]ສິ່ງຊຶ່ງທີ່ມີມາແຕ່ປະຖົມມະການ - ຊຶ່ງເຮົາໄດ້ຍິນ, ຊຶ່ງເຮົາໄດ້ເຫັນກັບຕາ, ຊຶ່ງເຮົາໄດ້ເບິ່ງ, ແລະ ສຳພັດດ້ວຍມືຂອງເຮົາ -
ນັ້ນຄືພຣະທຳອັນຊົງຊີວິດ.[2]ແລະຊີວິດທີ່ເຮົາໄດ້ຮູ້ຈັກ, ທີ່ເຮົາໄດ້ເຫັນ ແລະ ເປັນພະຍານ. ພວກເຮົາປະກາດຊີວິດນິຣັນດອນນີ້ແກ່ທ່ານ,
ຊຶ່ງເປັນຊີວິດທີ່ຢູ່ກັບພຣະບິດາເຈົ້າ, ແລະ ໄດ້ປາກົດແກ່ພວກເຮົາ.

[3]ສິ່ງທີ່ເຮົາໄດ້ເຫັນ ແລະ ໄດ້ຍິນນັ້ນເຮົາກໍປະກາດໃຫ້ທ່ານຊາບ, ເພື່ອທ່ານຈະເຂົ້າຮ່ວມສາມັກຄີທຳກັບເຮົາ.
ການສາມັກຄີທຳຂອງພວກເຮົາແມ່ນສາມັກຄີທຳຮ່ວມກັບພຣະບິດາເຈົ້າ ແລະ ພຣະເຢຊູຄຣິດເຈົ້າ, ພຣະບຸດຂອງພຣະອົງ.[4]ແລະ
ເຮົາຂຽນສິ່ງເຫລົ່ານີ້ ໃຫ້ແກ່ທ່ານເພື່ອຄວາມຊົມຊື່ນຍິນດີຂອງເຮົາຈະໄດ້ສົມບູນ.
[5]ນີ້ເປັນຖ້ອຍຄຳທີ່ເຮົາໄດ້ຍິນຈາກພຣະອົງ ແລະ ປະກາດແກ່ທ່ານວ່າ: ພຣະເຈົ້າ ຊົງເປັນຄວາມສະຫວ່າງ, ແລະ ໃນພຣະອົງບໍ່ມີຄວາມມືດເລີຍ.
[6]ຖ້າເຮົາກ່າວວ່າ ເຮົາຮ່ວມສາມັກຄີທຳກັບພຣະອົງ ແລະ ຍັງດຳເນີນຊີວິດຢູ່ໃນຄວາມມືດ, ເຮົາກໍກຳລັງເວົ້າຕົວະ ແລະ
ບໍ່ໄດ້ດຳເນີນຊີວິດຕາມຄວາມຈິງ.[7]ແຕ່ຖ້າເຮົາດຳເນີນຊີວິດຢູ່ໃນຄວາມສະຫວ່າງ ເໝືອນດັ່ງ ພຣະອົງທີ່ຊົງສະຖິດໃນຄວາມສະຫວ່າງ,
ເຮົາກໍຮ່ວມສາມັກຄີທຳ ຊຶ່ງກັນແລະ ກັນ, ແລະ ພຣະໂລຫິດຂອງພຣະເຢຊູເຈົ້າ ພຣະບຸດຂອງພຣະອົງກໍຊຳລະເຮົາ ຈາກຄວາມຜິດບາບທັງສິ້ນ.
[8]ຖ້າເຮົາເວົ້າວ່າເຮົາບໍ່ມີບາບ, ເຮົາກໍຫລອກລວງຕົນເອງ, ແລະ ຄວາມຈິງກໍບໍ່ມີໃນຕົວເຮົາເລີຍ.[9]ແຕ່ຖ້າເຮົາສາລະພາບບາບຂອງເຮົາ,
ພຣະອົງຊົງສັດຊື່ ແລະ ທ່ຽງທຳກໍຈະຊົງໂຜດຍົກໂທດຄວາມບາບຂອງເຮົາ ແລະ ຊຳລະເຮົາຈາກການອະທຳໝົດສິ້ນ.
[10]ຖ້າເຮົາເວົ້າວ່າເຮົາບໍ່ມີບາບ, ເຮົາກໍເຮັດໃຫ້ພຣະເຈົ້າເປັນຜູ້ຕົວະ, ແລະ ພຣະທຳຂອງພຣະອົງກໍບໍ່ໄດ້ຢູ່ໃນເຮົາ.

2 [1]ລູກນ້ອຍເອີຍ, ຂ້າພະເຈົ້າຂຽນຂໍ້ຄວາມເຫຼົ່ານີ້ມາເຖິງທ່ານທັງຫລາຍເພື່ອທ່ານຈະບໍ່ໄດ້ເຮັດບາບ. ແຕ່ຖ້າມີຜູ້ໃດເຮັດບາບ,
ເຮົາກໍມີອົງພຣະເຢຊູຄຣິດເຈົ້າ ຜູ້ຊົງທ່ຽງທຳທີ່ສະຖິດຢູ່ກັບພຣະບິດາເຈົ້າ.[2]ພຣະອົງຊົງເປັນຜູ້ລຶບລ້າງບາບຂອງເຮົາ, ແລະ
ບໍ່ແມ່ນແຕ່ບາບຂອງເຮົາເທົ່ານັ້ນ, ແຕ່ສຳລັບຄົນທັງໂລກດ້ວຍ.[3]ດ້ວຍເຫດນີ້ເຮົາຮູ້ວ່າເຮົາຮູ້ຈັກພຣະອົງ:
ຖ້າຫາກເຮົາປະຕິບັດຕາມກົດບັນຍັດຂອງພຣະອົງ.

[4]ຜູ້ທີ່ກ່າວວ່າ, “ ຂ້າພະເຈົ້າຮູ້ຈັກພຣະເຈົ້າ,” ແຕ່ບໍ່ໄດ້ປະຕິບັດຕາມກົດບັນຍັດ ຂອງພຣະອົງ, ກໍເປັນຄົນເວົ້າຕົວະ, ແລະ
ຄວາມຈິງກໍບໍ່ມີຢູ່ໃນຕົວເຂົາ.[5]ແຕ່ຜູ້ໃດ ປະຕິບັດຕາມພຣະທຳຂອງພຣະອົງ, ຢ່າງແນ່ນອນ, ໃນຄົນນັ້ນກໍມີຄວາມຮັກຂອງພຣະເຈົ້າຢູ່ຢ່າງບໍຣິບູນ.
ດ້ວຍເຫດນີ້ເຮົາຈຶ່ງຮູ້ວ່າເຮົາຢູ່ໃນພຣະອົງ.[6]ຜູ້ໃດທີ່ເວົ້າວ່າ, “ຕົນຢູ່ໃນພຣະເຈົ້າ” ກໍຄວນດຳເນີນຊີວິດຢ່າງທີ່ພຣະເຢຊູຄຣິດເຈົ້າຊົງດຳເນີນນັ້ນ.
[7]ທ່ານທີ່ຮັກ, ຂ້າພະເຈົ້າບໍ່ໄດ້ຂຽນກົດບັນຍັດໃໝ່ແກ່ທ່ານ, ແຕ່ເປັນກົດບັນຍັດ ເກົ່າຊຶ່ງທ່ານມີຢູ່ຕັ້ງແຕ່ເລີ່ມຕົ້ນ.
ກົດບັນຍັດເກົ່ານັ້ນຄືພຣະທຳທີ່ທ່ານທັງຫລາຍໄດ້ຍິນ ມາແລ້ວ.[8]ຂ້າພະເຈົ້າຂຽນກົດບັນຍັດໃໝ່ແກ່ທ່ານ, ເຊິ່ງເປັນຄວາມຈິງໃນ ພຣະຄຣິດເຈົ້າ
ແລະ ໃນທ່ານ, ເພາະວ່າຄວາມມືດກຳລັງຜ່ານພົ້ນໄປ, ແລະ ແສງແຫ່ງຄວາມຈິງກໍສ່ອງຢູ່ແລ້ວ.
[9]ຜູ້ທີ່ເວົ້າວ່າຕົນຢູ່ໃນຄວາມສະຫວ່າງ ແລະ ຍັງກຽດຊັງພີ່ນ້ອງຂອງຕົນຜູ້ນັ້ນກໍ ຍັງຢູ່ໃນຄວາມມືດຈົນເຖິງບັດນີ້.[10]ຜູ້ທີ່ຮັກພີ່ນ້ອງຂອງຕົນ
ກໍຕັ້ງຢູ່ໃນຄວາມສະຫວ່າງ ແລະ ໃນຄວາມສະຫວ່າງນັ້ນບໍ່ມີອັນໃດເຮັດໃຫ້ເຂົາສະດຸດ.[11]ແຕ່ຜູ້ ທີ່ກຽດຊັງພີ່ນ້ອງຂອງຕົນກໍຍັງຢູ່ໃນຄວາມມືດ
ແລະ ເດີນໃນຄວາມມືດ; ເຂົາບໍ່ຮູ້ວ່າ ຕົນກຳລັງຈະໄປໃສ, ເພາະຄວາມມືດໄດ້ໃຫ້ຕາຂອງເຂົາບອດເສຍ.
[12]ຂ້າພະເຈົ້າຂຽນຈົດໝາຍມາເຖິງທ່ານ, ຜູ້ເປັນລູກ, ເພາະວ່າຄວາມບາບຂອງທ່ານໄດ້ຮັບການອະໄພເພາະພຣະນາມຂອງພຣະອົງ.
[13]ຂ້າພະເຈົ້າກຳລັງຂຽນຈົດໝາຍມາເຖິງທ່ານທັງຫລາຍ, ທີ່ເປັນບິດາ, ເພາະທ່ານຮູ້ຈັກພຣະອົງ ຜູ້ດຳລົງຢູ່ຕັ້ງແຕ່ຕົ້ນ.
ຂ້າພະເຈົ້າຂຽນຈົດຫມາຍເຖິງທ່ານທັງຫລາຍ, ທີ່ເປັນຄົນໜຸ່ມ, ເພາະໄດ້ຊະນະມານຊົ່ວຮ້າຍນັ້ນ.
ຂ້າພະເຈົ້າຂຽນຈົດໝາຍເຖິງທ່ານທັງຫລາຍ, ທີ່ເປັນຄົນໜຸ່ມ, ເພາະທ່ານຮູ້ຈັກພຣະບິດາ.[14]ຂ້າພະເຈົ້າໄດ້ຂຽນຈົດໝາຍເຖິງທ່ານທັງຫລາຍ,
ທີ່ເປັນພໍ່, ເພາະທ່ານຮູ້ຈັກພຣະອົງ ຜູ້ດຳລົງຢູ່ຕັ້ງແຕ່ຕົ້ນ. ຂ້າພະເຈົ້າຂຽນຈົດຫມາຍເຖິງທ່ານທັງຫລາຍ, ທີ່ເປັນຄົນໜຸ່ມ,
ເພາະທ່ານມີກຳລັງແຂງແຮງ, ແລະ ພຣະທຳຂອງພຣະເຈົ້າດຳລົງຢູ່ໃນທ່ານທັງຫລາຍ, ແລະ ທ່ານໄດ້ຊະນະມານທີ່ຊົ່ວຮ້າຍແລ້ວ.
[15]ຢ່າຮັກໂລກ ຫລື ສິ່ງຂອງໃນໂລກ. ຖ້າຜູ້ໃດຮັກໂລກ, ຄວາມຮັກຂອງ ພຣະບິດາເຈົ້າກໍບໍ່ຢູ່ໃນຜູ້ນັ້ນ.[16]ສຳລັບທຸກສິ່ງທີ່ມີ ຢູ່ໃນໂລກ -
ຄືຕັນຫາຂອງເນື້ອກາຍ, ຕັນຫາຂອງຕາ, ແລະ ຄວາມອວດອ້າງຂອງຊີວິດ - ທີ່ບໍ່ໄດ້ມາຈາກ ພຣະບິດາເຈົ້າແຕ່ມາຈາກໂລກ.
[17]ໂລກກັບຕັນຫາຂອງໂລກ ກຳລັງເສື່ອມສູນ ໄປ. ແຕ່ຜູ້ທີ່ເຮັດຕາມນ້ຳພຣະໄທຂອງພຣະເຈົ້າຈະຕັ້ງຢູ່ຕະຫລອດໄປເປັນນິດ.
[18]ລູກນ້ອຍທັງຫລາຍເອີຍ, ບັດນີ້ເປັນເວລາສຸດທ້າຍແລ້ວ. ພຽງແຕ່ທ່ານໄດ້ຍິນມາວ່າຜູ້ຕໍ່ສູ້ພຣະຄຣິດກຳລັງມາ,
ບັດນີ້ຜູ້ຕໍ່ສູ້ພຣະຄຣິດຫລວງຫລາຍໄດ້ເຂົ້າມາແລ້ວ. ສະນັ້ນເຮົາຈຶ່ງຮູ້ວ່າເປັນເວລາສຸດທ້າຍ.[19]ພວກເຂົາໄດ້ອອກໄປຈາກເຮົາ, ແຕ່
ພວກເຂົາບໍ່ໄດ້ມາຈາກເຮົາ. ເພາະວ່າຖ້າພວກເຂົາມາຈາກເຮົາພວກເຂົາກໍຈະຢູ່ກັບເຮົາຕໍ່ໄປ, ແຕ່ເມື່ອພວກເຂົາອອກໄປແລ້ວ,
ນັ້ນສະແດງໃຫ້ເຫັນວ່າພວກເຂົາບໍ່ໄດ້ມາຈາກເຮົາ.
[20]ແຕ່ພວກທ່ານໄດ້ຮັບການຊົງຫົດສົງຈາກພຣະອົງຜູ້ບໍຣິສຸດແລ້ວ, ແລະ ທ່ານທັງຫລາຍກໍຮູ້ຄວາມຮູ້ຈິງ.
[21]ເຮົາບໍ່ໄດ້ຂຽນເຖິງພວກທ່ານບໍ່ແມ່ນເພາະທ່ານບໍ່ຮູ້ຄວາມຈິງ, ແຕ່ເພາະທ່ານທັງຫລາຍຮູ້ແລ້ວ ແລະ
ເພາະວ່າຄວາມຕົວະບໍ່ໄດ້ມາຈາກຄວາມຈິງ.
[22]ຜູ້ໃດເປັນຜູ້ເວົ້າຕົວະ ຄືຜູ້ທີ່ປະຕິເສດວ່າພຣະເຢຊູເຈົ້າບໍ່ແມ່ນພຣະຄຣິດບໍ? ຜູ້ ນັ້ນເປັນຜູ້ຕໍ່ຕ້ານພຣະຄຣິດ, ດ້ວຍເຫດທີ່ເຂົາປະຕິເສດ
ພຣະບິດາເຈົ້າ ແລະ ພຣະບຸດ.[23]ຜູ້ໃດທີ່ປະຕິເສດພຣະບຸດ ຜູ້ນັ້ນກໍບໍ່ມີພຣະບິດາເຈົ້າ. ຜູ້ໃດທີ່ຍອມຮັບ ພຣະບຸດ ຜູ້ນັ້ນກໍມີພຣະບິດາເຈົ້າດ້ວຍ.
[24]ຈົ່ງໃຫ້ສິ່ງທີ່ທ່ານໄດ້ຍິນມາຕັ້ງແຕ່ຕົ້ນນັ້ນດຳລົງຢູ່ກັບທ່ານເທີ້ນ. ຖ້າສິ່ງທີ່ທ່ານໄດ້ຍິນມາຕັ້ງແຕ່ຕົ້ນນັ້ນດຳລົງຢູ່ກັບທ່ານ,
ທ່ານກໍຕັ້ງໝັ້ນຄົງຢູ່ໃນພຣະບຸດ ແລະ ໃນພຣະບິດາເຈົ້າດ້ວຍ.[25]ນີ້ແຫຼະເປັນພຣະສັນຍາເຊິ່ງພຣະອົງໄດ້ໃຫ້ແກ່ເຮົາຄື: ຊີວິດນິຣັນດອນ.
[26]ເຮົາໄດ້ຂຽນຂໍ້ຄວາມນີ້ເຖິງທ່ານ ກ່າວເຖິງຄົນເຫຼົ່ານັ້ນທີ່ຫຼອກລວງທ່ານໃຫ້ຫຼົງຜິດໄປ.
[27]ສຳລັບທ່ານທັງຫລາຍ, ການຊົງເຈີມທີ່ທ່ານໄດ້ຮັບ ຈາກພຣະອົງກໍຕັ້ງຢູ່ກັບທ່ານ, ແລະ ທ່ານບໍ່ຈຳເປັນມີໃຜມາສອນທ່ານ.
ແຕ່ການຊົງເຈີມຂອງພຣະອົງນັ້ນຈະສອນທຸກສິ່ງແກ່ທ່ານ ແລະ ເປັນຄວາມຈິງບໍ່ແມ່ນຄວາມຕົວະ ແລະ ຈົ່ງຕັ້ງໝັ້ນຄົງຢູ່
ໃນພຣະອົງຕາມທີ່ທ່ານຖືກສອນນັ້ນ.[28]ບັດນີ້, ລູກທັງຫລາຍເອີຍ, ຈົ່ງຕັ້ງໝັ້ນຄົງຢູ່ໃນພຣະອົງ, ເພື່ອວ່າເມື່ອພຣະອົງປາກົດເຮົາຈະໄດ້ມີໃຈກ້າ
ແລະ ບໍ່ລະອາຍ ເມື່ອພຣະອົງສະເດັດມານັ້ນ.[29]ຖ້າທ່ານຮູ້ວ່າພຣະອົງຊົງທ່ຽງທຳ,
ທ່ານກໍຮູ້ວ່າທຸກຄົນທີ່ປະຕິບັດຕາມຄວາມທ່ຽງທຳໄດ້ບັງເກີດມາຈາກພຣະອົງດ້ວຍ.

# 3

[1]ເບິ່ງແມ! ຄວາມຮັກຂອງພຣະບິດາເຈົ້າທີ່ປະທານໃຫ້ແກ່ເຮົາ, ເປັນຢ່າງໃດທີ່ພຣະເຈົ້າຊົງເອີ້ນເຮົາວ່າເປັນບຸດຂອງພຣະອົງ, ແລະ
ເຮົາກໍໄດ້ເປັນ. ດ້ວຍເຫດນີ້, ໂລກບໍ່ຮູ້ຈັກເຮົາ, ເພາະໂລກບໍ່ຮູ້ຈັກພຣະອົງ.[2]ທ່ານທີ່ຮັກທັງຫລາຍ, ບັດນີ້ເຮົາເປັນບຸດຂອງພຣະເຈົ້າແລ້ວ, ແລະ
ຍັງບໍ່ສຳແດງວ່າເຮົາຈະເປັນຢ່າງໃດ. ເຮົາຮູ້ວ່າເມື່ອພຣະຄຣິດມາປາກົດ, ເພາະເຮົາຈະເຫັນພຣະອົງເປັນເໝືອນພຣະອົງທີ່ຊົງເປັນຢູ່.[3]ທຸກຄົນທີ່ມີ
ຄວາມໝັ້ນໃຈຢ່າງນີ້ ກຽວກັບອະນາຄົດກໍໃຫ້ຊໍາລະຕົນໃຫ້ບໍລິສຸດຢ່າງທີ່ພຣະອົງ ຊົງບໍລິສຸດ.

[4]ທຸກຄົນທີ່ເຮັດບາບກໍມີຄວາມຜິດຖານຝ່າຝືນກົດບັນຍັດ; ເພາະການບາບເປັນສິ່ງທີ່ຜິດຕໍ່ກົດບັນຍັດ.
[5]ພວກເຈົ້າຮູ້ວ່າພຣະອົງໄດ້ມາປະກົດເພື່ອເອົາຄວາມບາບອອກໄປ, ແລະ ໃນພຣະອົງກໍບໍ່ມີບາບເລີຍ.[6]ຜູ້ໃດທີ່ຢູ່ໃນພຣະອົງຜູ້ນັ້ນກໍບໍ່
ເຮັດບາບສ່ວນຜູ້ໃດທີ່ຍັງເຮັດບາບ. ຜູ້ນັ້ນຍັງບໍ່ເຫັນພຣະອົງ ຫລື ບໍ່ຮູ້ຈັກພຣະອົງ.
[7]ລູກທັງຫລາຍເອີຍ, ຢ່າໃຫ້ຜູ້ໃດຊັກຈູງທ່ານໃຫ້ຫລົງ. ຜູ້ທີ່ເຮັດຕາມຄວາມຊອບທຳກໍຊອບທຳ, ຢ່າງພຣະຄຣິດຊົງຊອບທຳ.
[8]ຜູ້ທີ່ເຮັດບາບກໍມາຈາກມານຮ້າຍ, ເພາະວ່າມານຮ້າຍໄດ້ເຮັດບາບຕັ້ງແຕ່ຕົ້ນ. ດ້ວຍເຫດນີ້ພຣະບຸດຂອງພຣະເຈົ້າຈຶ່ງໄດ້ມາປາກົດ,
ເພື່ອພຣະອົງຈະຊົງທຳລາຍກິດຈະການຂອງມານຮ້າຍເສຍ.
[9]ຜູ້ໃດທີ່ບັງເກີດຈາກພຣະເຈົ້າ ຜູ້ນັ້ນກໍບໍ່ເຮັດບາບອີກ ເພາະເມັດພຣະຄຳຂອງພຣະເຈົ້າດຳລົງຢູ່ກັບຜູ້ນັ້ນ.
ເຂົາບໍ່ອາດເຮັດບາບໄດ້ເພາະເຂົາໄດ້ບັງເກີດຈາກພຣະເຈົ້າແລ້ວ.[10]ດ້ວຍເຫດນີ້ບຸດຂອງພຣະເຈົ້າ ແລະ ລູກຂອງມານຈຶ່ງຖືກເປີດເຜີຍ.
ຄືຜູ້ທີ່ບໍ່ເຮັດຕາມຄວາມຊອບທຳຈາກພຣະເຈົ້າ; ແລະ ບໍ່ຮັກພີ່ນ້ອງຂອງຕົນຜູ້ນັ້ນບໍ່ໄດ້ມາຈາກພຣະເຈົ້າ.
[11]ທີ່ທ່ານໄດ້ຍິນມາຕັ້ງແຕ່ຕອນຕົ້ນວ່າ: ໃຫ້ເຮົາຮັກຊຶ່ງກັນ ແລະ ກັນ,[12]ຈົ່ງຢ່າໃຫ້ເປັນເໝືອນກາອິນ, ທີ່ມາຈາກມານຊົ່ວຮ້າຍ ແລະ
ໄດ້ຂ້ານ້ອງຊາຍຂອງຕົນເອງ. ດ້ວຍເຫດໃດເຂົາຈຶ່ງຂ້ານ້ອງ? ກໍເພາະການເຮັດຂອງເຂົາຊົ່ວ, ແລະ ນ້ອງເຂົານັ້ນ ກໍຊອບທຳ.
[13]ຢ່າປະຫລາດໃຈ, ພີ່ນ້ອງທັງຫລາຍເອີຍ, ຖ້າໂລກກຽດຊັງທ່ານ.[14]ເຮົາທັງຫລາຍຮູ້ແລ້ວວ່າເຮົາໄດ້ພົ້ນຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ,
ກໍເພາະເຮົາຮັກພີ່ນ້ອງ. ຜູ້ໃດທີ່ບໍ່ຮັກຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ.[15]ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນຜູ້ນັ້ນກໍເປັນຜູ້ຂ້າຄົນ. ແລະ
ທ່ານກໍຮູ້ແລ້ວວ່າຜູ້ຂ້າຄົນນັ້ນບໍ່ມີຊີວິດນິຣັນດອນຕັ້ງຢູ່ໃນເຂົາເລີຍ.
[16]ດັ່ງນີ້ແຫລະເຮົາຈຶ່ງຮູ້ຈັກຄວາມຮັກ, ເພາະພຣະຄຣິດຊົງຍອມສະຫລະຊີວິດ ຂອງພຣະອົງເພື່ອເຮົາທັງຫລາຍ.
ເຮົາຈຶ່ງຄວນສະຫລະຊີວິດຂອງເຮົາເພື່ອພີ່ນ້ອງເຊັ່ນກັນ.[17]ແຕ່ຖ້າຜູ້ໃດມີຊັບສົມບັດໃນໂລກນີ້, ເຫັນພີ່ນ້ອງຂອງຕົນຂັດສົນແລ້ວ,
ຍັງບໍ່ຍອມມີໃຈເມດຕາຄວາມຮັກຂອງພຣະເຈົ້າຈະດຳລົງຢູ່ໃນຜູ້ນັ້ນໄດ້ຢ່າງໃດ?.[18]ລູກທີ່ຮັກຂອງເຮົາເອີຍ,
ຢ່າໃຫ້ພວກເຮົາຮັກກັນດ້ວຍຄວາມເວົ້າ, ແລະ ດ້ວຍປາກເທົ່ານັ້ນ, ແຕ່ຈົ່ງຮັກກັນດ້ວຍການກະທຳ ແລະ ດ້ວຍຄວາມຈິງ.
[19]ດ້ວຍເຫດນີ້ເຮົາຮູ້ວ່າ ເຮົາມາຈາກຄວາມຈິງ, ແລະ ເຮົາໝັ້ນໃຈຕໍ່ໜ້າພຣະອົງ.[20]ເພາະຖ້າໃຈຂອງເຮົາກ່າວໂທດຕົວເຮົາ,
ພຣະເຈົ້າຊົງຍິ່ງໃຫຍ່ກວ່າໃຈເຮົາ, ແລະ ພຣະອົງກໍຊົງຮູ້ທຸກໆສິ່ງ.[21]ທ່ານທີ່ຮັກທັງຫລາຍ, ຖ້າໃຈຂອງເຮົາບໍ່ໄດ້ ກ່າວໂທດເຮົາ,
ເຮົາກໍມີຄວາມຫມັ້ນໃຈຕໍ່ພຣະເຈົ້າ.[22]ບໍ່ວ່າເຮົາຈະຂໍສິ່ງໃດ ເຮົາ ກໍຈະໄດ້ຮັບຈາກພຣະອົງ, ເພາະເຮົາປະຕິບັດຕາມພຣະບັດຍັດຂອງພຣະອົງ.
ແລະ ເຮັດໃນສິ່ງທີ່ເປັນທີ່ພໍພຣະໄທຕໍ່ພຣະພັກພຣະອົງ.
[23]ນີ້ເປັນພຣະບັນຍັດຂອງພຣະອົງຄື: ໃຫ້ເຮົາເຊື່ອໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ພຣະບຸດຂອງພຣະອົງ ແລະ ຮັກຊຶ່ງກັນແລະກັນ,
ຕາມພຣະບັນຍັດທີ່ພຣະອົງໄດ້ໃຫ້ແກ່ເຮົານັ້ນ.[24]ຜູ້ທີ່ປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ ກໍຢູ່ ໃນພຣະອົງ ແລະ
ພຣະເຈົ້າກໍຊົງສະຖິດຢູ່ໃນເຂົາ. ດ້ວຍເຫດນີ້ເຮົາຈຶ່ງຮູ້ວ່າພຣະອົງຊົງສະຖິດຢູ່ໃນເຮົາໂດຍພຣະວິນຍານ ຜູ້ຊຶ່ງພຣະອົງໄດ້ປະທານໃຫ້ແກ່ເຮົາ.


generated on Tue Jun 17 19:01:42 2025

4 [1]ທ່ານທີ່ຮັກ, ຢ່າເຊື່ອທຸກວິນຍານ. ແຕ່ຈົ່ງພິສູດວິນຍານເຫລົ່ານັ້ນວ່າມາຈາກພຣະເຈົ້າ ຫລື ບໍ່,
ເພາະວ່າມີຜູ້ທຳນວາຍປອມຫລາຍຄົນໄດ້ອອກໄປໃນໂລກ.[2]ດ້ວຍເຫດນີ້ ທ່ານຈະຮູ້ຈັກພຣະວິນຍານຂອງພຣະເຈົ້າ -
ຄືທຸກວິນຍານທີ່ຍອມຮັບວ່າ ພຣະເຢຊູຄຣິດເຈົ້າໄດ້ສະເດັດມາເປັນມະນຸດ ນັ້ນກໍມາຈາກພຣະເຈົ້າ,[3]ແລະ
ທຸກວິນຍານທີ່ບໍ່ຍອມຮັບພຣະເຢຊູເຈົ້າວ່າມາຈາກພຣະເຈົ້າ. ນີ້ເປັນວິນຍານຂອງຜູ້ຕໍ່ສູ້ພຣະຄຣິດເຈົ້າ ຊຶ່ງທ່ານໄດ້ຍິນວ່າກຳລັງຈະມາ, ແລະ
ບັດນີ້ກໍຢູ່ໃນໂລກແລ້ວ.

[4]ລູກທີ່ຮັກ, ທ່ານມາຈາກພຣະເຈົ້າ ແລະ ໄດ້ຊະນະເຂົາເຫຼົ່ານັ້ນແລ້ວ, ເພາະວ່າຜູ້ທີ່ຢູ່ໃນທ່ານ ກໍເປັນໃຫຍ່ກວ່າຜູ້ທີ່ຢູ່ໃນໂລກ.
[5]ພວກເຂົາມາຈາກໂລກ; ເຫດສະນັ້ນ ສິ່ງທີ່ພວກເຂົາເວົ້າຈຶ່ງມາຈາກໂລກ, ແລະ ໂລກກໍເຊື່ອຟັງພວກເຂົາ.[6]ເຮົາທັງຫລາຍມາຈາກພຣະເຈົ້າ.
ຜູ້ໃດທີ່ຮູ້ຈັກພຣະເຈົ້າກໍຟັງພວກເຮົາ. ຜູ້ໃດທີ່ບໍ່ໄດ້ມາຈາກພຣະເຈົ້າກໍຈະບໍ່ຟັງເຮົາ. ດ້ວຍເຫດນີ້ເຮົາຈຶ່ງຮູ້ຈັກວິນຍານແຫ່ງຄວາມຈິງ ແລະ
ວິນຍານແຫ່ງຄວາມບໍ່ຈິງ.
[7]ທ່ານທີ່ຮັກທັງຫລາຍ, ໃຫ້ເຮົາຮັກຊຶ່ງກັນ ແລະ ກັນ, ເພາະວ່າຄວາມຮັກມາຈາກພຣະເຈົ້າ, ແລະ ທຸກຄົນທີ່ຮັກກໍມາຈາກພຣະເຈົ້າ ແລະ
ຮູ້ຈັກພຣະເຈົ້າ.[8]ຜູ້ທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ, ເພາະວ່າພຣະເຈົ້າຊົງເປັນຄວາມຮັກ.
[9]ເພາະເຫດນີ້ຄວາມຮັກຂອງພຣະເຈົ້າກໍປາກົດໃຫ້ເຫັນທ່າມກາງພວກເຮົາ,
ຄືພຣະເຈົ້າຊົງປະທານພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກ, ເພື່ອເຮົາຈະໄດ້ມີ ຊີວິດດ້ວຍພຣະອົງ.[10]ໃນຄວາມຮັກນີ້,
ບໍ່ແມ່ນເຮົາຮັກພຣະເຈົ້າ ແຕ່ແມ່ນພຣະອົງທີ່ຊົງຮັກເຮົາ, ແລະ ຊົງປະທານພຣະບຸດຂອງພຣະອົງມາເປັນເຄື່ອງບູຊາໄຖ່ບາບຂອງເຮົາ.
[11]ທ່ານທີ່ຮັກທັງຫລາຍ, ຖ້າພຣະເຈົ້າຊົງຮັກເຮົາ, ເຮົາກໍຄວນຈະຮັກຊຶ່ງກັນ ແລະກັນດ້ວຍ.[12]ບໍ່ມີຜູ້ໃດໄດ້ເຫັນພຣະເຈົ້າ.
ຖ້າເຮົາທັງຫລາຍຮັກຊຶ່ງກັນ ແລະ ກັນ, ພຣະເຈົ້າກໍຊົງສະຖິດຢູ່ໃນເຮົາ. ແລະ ຄວາມຮັກຂອງພຣະອົງກໍສົມບູນໃນເຮົາ.[13]ດັ່ງນີ້ແຫລະ
ເຮົາທັງຫລາຍຈຶ່ງຮູ້ວ່າເຮົາຢູ່ໃນພຣະອົງ ແລະ ພຣະອົງຊົງສະຖິດຢູ່ໃນເຮົາ,
ເພາະພຣະອົງໄດ້ຊົງປະທານພຣະວິນຍານຂອງພຣະອົງເອງແກ່ເຮົາ.[14]ເຮົາທັງຫລາຍໄດ້ເຫັນ ແລະ
ເປັນພະຍານວ່າພຣະບິດາເຈົ້າໄດ້ຊົງໃຊ້ພຣະບຸດ ມາເປັນພຣະຜູ້ຊ່ວຍໃຫ້ລອດຂອງໂລກ.
[15]ຜູ້ໃດທີ່ຍອມຮັບວ່າພຣະເຢຊູເຈົ້າຊົງເປັນພຣະບຸດຂອງພຣະເຈົ້າ, ພຣະເຈົ້າກໍຈະຊົງສະຖິດຢູ່ໃນຜູ້ນັ້ນ ແລະ ຜູ້ນັ້ນກໍຢູ່ໃນພຣະເຈົ້າ.
[16]ດັ່ງນັ້ນເຮົາທັງຫລາຍຈຶ່ງຮູ້ ແລະ ເຊື່ອໃນຄວາມຮັກທີ່ພຣະເຈົ້າໄດ້ຊົງມີຕໍ່ເຮົາ. ພຣະເຈົ້າເປັນຄວາມຮັກ ແລະ
ຜູ້ໃດທີ່ຢູ່ໃນຄວາມຮັກນີ້ກໍຢູ່ໃນພຣະເຈົ້າ ແລະ ພຣະເຈົ້າກໍຊົງສະຖິດຢູ່ໃນຜູ້ນັ້ນ.
[17]ເພາະເຫດນີ້, ຄວາມຮັກນີ້ຖືກເຮັດໃຫ້ສົມບູນທ່າມກາງເຮົາທັງຫລາຍ, ເພື່ອເຮົາທັງຫລາຍຈະໄດ້ມີຄວາມໝັ້ນໃຈໃນວັນພິພາກສາ,
ເພາະພຣະອົງຊົງເປັນຢ່າງໃດ ເຮົາທັງຫລາຍໃນໂລກນີ້ກໍເປັນຢ່າງນັ້ນ.[18]ໃນຄວາມຮັກນັ້ນບໍ່ມີຄວາມຢ້ານ.
ແຕ່ຄວາມຮັກທີ່ສົມບູນກໍຂັບໄລ່ຄວາມຢ້ານອອກໄປເສັຍ, ເພາະຄວາມຢ້ານເຂົ້າກັບການລົງໂທດ.
ແຕ່ຜູ້ທີ່ມີຄວາມຢ້ານກໍຍັງບໍ່ມີຄວາມຮັກທີ່ສົມບູນ.
[19]ເຮົາຮັກກໍເພາະພຣະອົງຊົງຮັກເຮົາກ່ອນ.[20]ຖ້າຜູ້ໃດວ່າ, “ຂ້າພະເຈົ້າຮັກພຣະເຈົ້າ” ແຕ່ກຽດຊັງພີ່ນ້ອງຂອງຕົນຢູ່, ຜູ້ນັ້ນກໍເປັນຄົນຂີ້ຕົວະ.
ເພາະວ່າຜູ້ທີ່ບໍ່ຮັກພີ່ນ້ອງຂອງຕົນ, ຜູ້ທີ່ເບິ່ງເຫັນໄດ້, ກໍບໍ່ສາມາດຮັກພຣະເຈົ້າ, ທີ່ຕາບໍ່ເຫັນໄດ້.[21]ແລະ
ນີ້ເປັນພຣະບັນຍັດທີ່ເຮົາໄດ້ຮັບຈາກພຣະອົງ: ຄື “ຜູ້ໃດທີ່ຮັກພຣະເຈົ້າກໍຈົ່ງຮັກພີ່ນ້ອງຂອງຕົນດ້ວຍ.”

5 1ຜູ້ໃດທີ່ເຊື່ອວ່າພຣະເຢຊູເຈົ້າຊົງເປັນພຣະຄຣິດຜູ້ນັ້ນກໍເກີດຈາກພຣະເຈົ້າ, ແລະ ຜູ້ໃດທີ່ຮັກພຣະບິດາຍ່ອມຮັກບຸດທີ່ເກີດຈາກພຣະອົງດ້ວຍ.
2ເພາະເຫດນີ້ເຮົາຈຶ່ງ ຮູ້ວ່າເຮົາຮັກບຸດທັງຫລາຍຂອງພຣະເຈົ້າ: ຄືເມື່ອເຮົາຮັກພຣະເຈົ້າ ແລະ ຖືປະຕິບັດຕາມ ກົດບັນຍັດຂອງພຣະອົງ.
3ເພາະນີ້ເປັນຄວາມຮັກຕໍ່ພຣະເຈົ້າ: ຄືການທີ່ເຮົາປະຕິບັດຕາມພຣະບັນຍັດຂອງພຣະອົງ. ແລະ ພຣະບັນຍັດຂອງພຣະອົງບໍ່ຍາກໜັກເກີນໄປ.

4ເພາະທຸກຄົນທີ່ເກີດຈາກພຣະເຈົ້າກໍມີໄຊຊະນະເໜືອໂລກ. ແລະ ໄຊຊະນະເໜືອໂລກນີ້: ຄືຄວາມເຊື່ອຂອງເຮົາ.
5ຜູ້ໃດຄືຜູ້ທີ່ມີໄຊຊະນະເໜືອໂລກ? ຄືຜູ້ ທີ່ເຊື່ອວ່າພຣະເຢຊູເຈົ້າຊົງເປັນພຣະບຸດຂອງພຣະເຈົ້າ.
6ນີ້ຄືຜູ້ທີ່ໄດ້ມາໂດຍນ້ຳ ແລະ ພຣະໂລຫິດຄື: ພຣະເຢຊູຄຣິດເຈົ້າ. ພຣະອົງບໍ່ໄດ້ມາດ້ວຍນ້ຳສິ່ງດຽວ, ແຕ່ດ້ວຍນ້ຳ ແລະ ພຣະໂລຫິດ.
7ເພາະມີພະຍານຢູ່ສາມປະການຄື: 8ພຣະວິນຍານ, ນ້ຳ ແລະ ພຣະໂລຫິດ. ແລະ ພະຍານທັງສາມນີ້ກໍເຫັນພ້ອມຕໍ່ກັນ.
9ຖ້າເຮົາຮັບຄຳພະຍານຂອງມະນຸດ, ຄຳພະຍານຂອງພຣະເຈົ້າກໍຍິ່ງໃຫຍ່ກວ່າ.
ເພາະວ່າພະຍານຫຼັກຖານຂອງພຣະເຈົ້າທີ່ພຣະອົງໄດ້ຊົງເປັນພະຍານອ້າງເຖິງພຣະບຸດຂອງພຣະອົງ. 10ຜູ້ໃດທີ່ເຊື່ອໃນພຣະບຸດຂອງພຣະເຈົ້າ
ກໍມີພະຍານຢູ່ໃນຕົວ ຂອງເຂົາ ຜູ້ໃດທີ່ບໍ່ເຊື່ອພຣະເຈົ້າກໍໄດ້ເຮັດໃຫ້ພຣະອົງເປັນຜູ້ຕົວະ
ເພາະເຂົາບໍ່ໄດ້ເຊື່ອຄຳພະຍານທີ່ພຣະເຈົ້າໄດ້ເປັນພະຍານໃນເລື່ອງພຣະບຸດຂອງພຣະອົງ.
11ແລະ ພະຍານຫຼັກຖານນັ້ນກໍຄື: ພຣະເຈົ້າໄດ້ຊົງປະທານຊີວິດນິຣັນດອນໃຫ້ເຮົາ, ແລະ ຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງ.
12ຜູ້ທີ່ມີພຣະບຸດກໍມີຊີວິດ. ສ່ວນຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ.
13ຂ້າພະເຈົ້າຂຽນຂໍ້ຄວາມເຫລົ່ານີ້ເຖິງທ່ານທີ່ເຊື່ອໃນພຣະນາມຂອງພຣະບຸດຂອງພຣະເຈົ້າ ເພື່ອທ່ານຈະໄດ້ຮູ້ວ່າທ່ານມີຊີວິດນິຣັນດອນ.
14ນີ້ແຫລະຄືຄວາມໝັ້ນໃຈທີ່ເຮົາມີຢູ່ຕໍ່ພຣະອົງ, ຄືຖ້າເຮົາທູນຂໍສິ່ງໃດທີ່ເປັນຕາມພຣະປະສົງຂອງພຣະອົງ, ພຣະອົງກໍຈະຟັງເຮົາ.
15ຖ້າເຮົາຮູ້ວ່າພຣະອົງຟັງເຮົາ ບໍ່ວ່າເຮົາທູນຂໍສິ່ງໃດ - ເຮົາກໍຮູ້ວ່າເຮົາໄດ້ຮັບສິ່ງທີ່ເຮົາທູນຂໍຈາກພຣະອົງນັ້ນ.
16ຖ້າຜູ້ໃດເຫັນພີ່ນ້ອງຂອງຕົນເຮັດບາບທີ່ບໍ່ນຳໄປສູ່ຄວາມຕາຍ. ໃຫ້ຜູ້ນັ້ນພາວັນນາອະທິຖານ, ແລ້ວພຣະເຈົ້າຈະຊົງປະທານຊີວິດໃຫ້ແກ່ເຂົາ.
ຂ້າພະເຈົ້າໝາຍເຖິງບາບທີ່ບໍ່ນຳໄປສູ່ຄວາມຕາຍ, ສ່ວນບາບທີ່ນຳໄປສູ່ຄວາມຕາຍກໍມີຢູ່;
ຂ້າພະເຈົ້າບໍ່ໄດ້ບອກວ່າເຂົາຄວນອະທິຖານໃນເລື່ອງນີ້. 17ການອະທຳທຸກຢ່າງກໍເປັນບາບ ແຕ່ບາບທີ່ບໍ່ນຳໄປສູ່ຄວາມຕາຍກໍມີຢູ່.
18ເຮົາຮູ້ວ່າຜູ້ທີ່ເກີດຈາກພຣະເຈົ້າບໍ່ເຮັດບາບ, ແຕ່ພຣະອົງຜູ້ຊົງບັງເກີດຈາກພຣະເຈົ້າ ພຣະເຈົ້າຈະຄຸ້ມຄອງຮັກສາເຂົາ, ແລະ
ຄວາມຊົ່ວຮ້າຍບໍ່ສາມາດເຮັດອັນຕະລາຍເຂົາໄດ້. 19ເຮົາຮູ້ວ່າເຮົາເກີດຈາກພຣະເຈົ້າ, ແລະ ເຮົາຮູ້ວ່າຄົນທັງໂລກທັງໝົດຈົມຢູ່ໃຕ້ມານຊົ່ວຮ້າຍ.
20ແຕ່ເຮົາຮູ້ວ່າພຣະບຸດຂອງພຣະເຈົ້າສະເດັດມາແລ້ວ ແລະ ປະທານສະຕິປັນຍາໃຫ້ແກ່ເຮົາເພື່ອທີ່ເຮົາຈະໄດ້ຮູ້ຈັກອົງຜູ້ທ່ຽງແທ້ ແລະ
ເຮົາຢູ່ໃນພຣະອົງຜູ້ຊົງທ່ຽງແທ້ນັ້ນຄືໃນພຣະເຢຊູຄຣິດ ເຈົ້າພຣະບຸດຂອງພຣະອົງ, ພຣະອົງຊົງເປັນພຣະເຈົ້າຜູ້ທ່ຽງແທ້ ແລະ
ເປັນຊີວິດນິຣັນດອນ. 21ລູກທັງຫລາຍເອີຍ ຈົ່ງລະວັງຮັກສາຕົວຈາກບັນດາຮູບເຄົາຣົບທັງຫລາຍ.

# 2 ໂຢຮັນ

1 1ຈາກຜູ້ປົກຄອງເຖິງທ່ານສຸພາບສະຕຣີທີ່ຊົງເລືອກໄວ້ ແລະ ບັນດາລູກຂອງທ່ານ, ຜູ້ທີ່ ຂ້າພະເຈົ້າຮັກໃນຄວາມຈິງ - ແລະ
ບໍ່ແມ່ນພຽງແຕ່ຂ້າພະເຈົ້າເທົ່ານັ້ນ, ແຕ່ທຸກຄົນທີ່ໄດ້ຮູ້ຄວາມຈິງກໍຮັກດ້ວຍ - 2ເພາະຄວາມຈິງດຳລົງຢູ່ໃນເຮົາ ແລະ ຈະຢູ່ກັບເຮົາ
ຕະຫລອດໄປ. 3ຂໍພຣະຄຸນ, ພຣະເມດຕາ, ແລະ ສັນຕິສຸກຈາກພຣະເຈົ້າພຣະບິດາເຈົ້າ ແລະ ຈາກພຣະເຢຊູຄຣິດເຈົ້າ,
ພຣະບຸດແຫ່ງພຣະບິດາ, ຈະສະຖິດຢູ່ກັບເຮົາໃນຄວາມຈິງ ແລະ ໃນຄວາມຮັກ.

4ຂ້າພະເຈົ້າຍິນດີເປັນຢ່າງຍິ່ງທີ່ເຫັນວ່າລູກຂອງທ່ານບາງຄົນໄດ້ດຳເນີນຢູ່ໃນ ຄວາມຈິງ, ຢ່າງທີ່ເຮົາໄດ້ຮັບພຣະບັນຊານີ້ຈາກພຣະບິດາເຈົ້າ.
5ບັດນີ້ຂ້າພະເຈົ້າຂໍວິງວອນທ່ານ, ສຸພາບສະຕຣີ - ບໍ່ແມ່ນເໝືອນວ່າຂ້າພະເຈົ້າໄດ້ຂຽນບັນຍັດໃໝ່ໃຫ້ແກ່ທ່ານ,
ແຕ່ເປັນຂໍ້ບັນຍັດທີ່ເຮົາໄດ້ມີມາຕັ້ງແຕ່ຕົ້ນເດີມແລ້ວ ນັ້ນກໍຄືໃຫ້ເຮົາຮັກຊຶ່ງແລະກັນ. 6ແລະ ຄວາມຮັກນີ້,
ຄືການທີ່ເຮົາຄວນດຳເນີນຕາມພຣະບັນຍັດຂອງພຣະອົງ. ນີ້ເປັນພຣະບັນຍັດ, ທີ່ທ່ານໄດ້ຍິນມາຕັ້ງແຕ່ຕົ້ນເດີມນັ້ນ,
ເພື່ອທ່ານທັງຫລາຍຄວນຈະໄດ້ປະຕິບັດຕາມ.
7ເພາະວ່າມີຜູ້ຫລອກລວງເປັນຈຳນວນຫລາຍອອກໄປໃນໂລກ, ແລະ ພວກເຂົາບໍ່ຍອມ ຮັບວ່າ ພຣະເຢຊູຄຣິດເຈົ້າໄດ້ສະເດັດລົງມາເປັນມະນຸດ.
ນີ້ຄືຜູ້ຫລອກລວງ ແລະ ເປັນຜູ້ທີ່ຕໍ່ສູ້ພຣະຄຣິດເຈົ້າ. 8ຈົ່ງລະວັງຕົວທ່ານໃຫ້ດີ, ເພື່ອທ່ານຈະບໍ່ສູນເສຍສິ່ງຕ່າງໆທີ່ເຮົາທຸກຄົນໄດ້ກະທຳມາແລ້ວ,
ແຕ່ເພື່ອທີ່ທ່ານຈະໄດ້ຮັບລາງວັນຈົນເຕັມຂະໜາດ.
9ຜູ້ໃດກໍຕາມທີ່ຄິດວ່າຕົວເອງຮູ້ດີແລ້ວ ແລະ ບໍ່ຢູ່ໃນຄຳສອນຂອງພຣະຄຣິດເຈົ້າ ກໍບໍ່ມີພຣະເຈົ້າ. ຜູ້ທີ່ຢູ່ໃນຄຳສັ່ງສອນ,
ຜູ້ນັ້ນກໍມີທັງພຣະບິດາເຈົ້າ ແລະ ພຣະບຸດ. 10ຖ້າຜູ້ໃດມາຫາທ່ານ ແລະ ບໍ່ນຳຄຳສອນນີ້ມາດ້ວຍ, ຢ່າຮັບເຂົາເຂົ້າໃນເຮືອນຂອງທ່ານ ແລະ
ຢ່າທັກທາຍເຂົາ. 11ເພາະວ່າຜູ້ທີ່ທັກທາຍເຂົາກໍມີສ່ວນຮ່ວມໃນການກະທຳຊົ່ວຂອງເຂົານັ້ນ.
12ຂ້າພະເຈົ້າຍັງມີຫລາຍຢ່າງທີ່ຈະຂຽນເຖິງທ່ານ, ແຕ່ຂ້າພະເຈົ້າບໍ່ຢາກຂຽນສິ່ງເຫລົ່ານີ້ດ້ວຍເຈ້ຍ ແລະ ນ້ຳມຶກ. ຢ່າງໃດກໍດີ,
ຂ້າພະເຈົ້າຫວັງວ່າຈະມາຫາທ່ານ ແລະ ເວົ້າກັບທ່ານໂດຍຕົງ, ເພື່ອຄວາມຍິນດີຂອງເຮົາຈະໄດ້ເຕັມປ່ຽມ.
13ບັນດາລູກຂອງນ້ອງສາວຂອງທ່ານທີ່ໄດ້ຊົງເລືອກໄວ້ ໄດ້ຝາກຄວາມຄິດເຖິງມາຍັງທ່ານດ້ວຍ.

# 3 ໂຢຮັນ

1 1ຈາກ ຂ້າພະເຈົ້າຜູ້ເຖົ້າແກ່ ຮອດ ທ່ານຄາໂຢທີ່ຮັກ ຜູ້ຊຶ່ງທີ່ຂ້າພະເຈົ້າຮັກເນື່ອງດ້ວຍຄວາມຈິງ. 2ທ່ານທີ່ຮັກເອີຍ,
ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເລີນດີຂຶ້ນໃນທຸກສິ່ງ ແລະ ມີສຸກຂະພາບແຂງແຮງ, ເໝືອນຢ່າງຈິດວິນຍານຂອງທ່ານທີ່ຈະເລີນດີຢູ່ນັ້ນ.

 generated on Tue Jun 17 19:01:42 2025

[3]ເພາະວ່າຂ້າພະເຈົ້າມີຄວາມຍິນດີຫລາຍ ເມື່ອພວກພີ່ນ້ອງບາງຄົນໄດ້ມາ ແລະ ເປັນ ພະຍານເຖິງຄວາມສັດຈິງຂອງທ່ານ,
ເໝືອນຢ່າງທ່ານໄດ້ປະຕິບັດຕາມຄວາມສັດຈິງນັ້ນ.[4]ບໍ່ມີສິ່ງໃດທີ່ຈະເຮັດໃຫ້ຂ້າພະເຈົ້າຍິນດີໄປຫລາຍກວ່ານີ້, ຄືທີ່ໄດ້ຍິນວ່າ
ລູກທັງຫລາຍຂອງຂ້າພະເຈົ້າປະຕິບັດຕາມຄວາມຈິງ.

[5]ທ່ານທີ່ຮັກເອີຍ, ເມື່ອທ່ານສລະເຫື່ອແຮງໃຫ້ພວກພີ່ນ້ອງ ເປັນຕົ້ນວ່າໃຫ້ແຂກທີ່ມາເຮືອນ ກໍເປັນທີ່ສະແດງເຖິງຄວາມຈິງຮັກພັກດີຂອງທ່ານ.
[6]ເຂົາເຫລົ່ານັ້ນໄດ້ເປັນພະຍານຕໍ່ຄຣິສຕະຈັກ, ໃນເຣື່ອງຄວາມຮັກຂອງທ່ານ
ຖ້າທ່ານຈະຊ່ວຍສົ່ງເຂົາເຫລົ່ານັ້ນໃຫ້ສົມກັບການປະຕິບັດພຣະເຈົ້າ ທ່ານກໍເຮັດດີ.
[7]ເພາະການທີ່ພວກເຂົາອອກໄປນີ້ກໍເພື່ອເຫັນແກ່ພຣະນາມຂອງພຣະອົງ ໂດຍບໍ່ຮັບສິ່ງໃດຈາກຄົນຕ່າງຊາດ.[8]ສະນັ້ນ, ຝ່າຍເຮົາທັງຫລາຍ
ຈຳເປັນຕ້ອງສະນັບສະນຸນອູ້ມຊູຄົນຢ່າງນັ້ນ, ເພື່ອວ່າພວກເຮົາຈະກາຍເປັນຜູ້ຮ່ວມງານກັນໃນຄວາມຈິງ.
[9]ຂ້າພະເຈົ້າໄດ້ຂຽນບາງສິ່ງບາງຢ່າງເຖິງຄຣິສຕະຈັກ, ແຕ່ດີໂອເທເຟ, ຜູ້ມັກຕັ້ງຕົວຢາກຈະເປັນໃຫຍ່ເໜືອໝູ່ ກໍບໍ່ຍອມຮັບເຮົາ.[10]ສະນັ້ນ,
ຖ້າຂ້າພະເຈົ້າມາ ຂ້າພະເຈົ້າຈະ ເຜີຍການທີ່ລາວເຮັດ, ຄືທີ່ລາວໄດ້ກ່າວໃສ່ຮ້າຍຕໍ່ຂ້າພະເຈົ້າດ້ວຍຄວາມບໍ່ມີແກ່ນສານແລະເທົ່ານັ້ນຍັງບໍ່ສົມໃຈ
ຊໍ້າບໍ່ໜຳ ລາວຍັງປະຕິເສດ, ບໍ່ຍອມຮັບຕ້ອນພີ່ນ້ອງເຫລົ່ານັ້ນ ແລ້ວຍັງກີດກັ້ນຄົນທັງຫລາຍ ທີ່ຢາກຮັບຕ້ອນເຂົາ
ກັບທັງຕັດເຂົາອອກເສັຽຈາກຄຣິສຕະຈັກ.
[11]ທ່ານທີ່ຮັກເອີຍ, ຢ່າເອົາການຊົ່ວຮ້າຍເປັນແບບຢ່າງ ແຕ່ຈົ່ງເອົາການດີງາມ ຜູ້ທີ່ເຮັດດີ ກໍເປັນຂອງພຣະເຈົ້າ;
ຜູ້ທີ່ເຮັດການຊົ່ວກໍບໍ່ໄດ້ເຫັນພຣະເຈົ້າ.[12]ສ່ວນເດເມທີໂອນັ້ນ ທຸກຄົນກໍເປັນພະຍານວ່າ ເພິ່ນເປັນຄົນດີ ແລະ ຄວາມຈິງເອງກໍເປັນຍານ,
ຝ່າຍຂ້າພະເຈົ້າກໍເປັນພະຍານເໝືອນກັນ ແລະທ່ານຮູ້ແລ້ວວ່າຄຳພະຍານຂອງຂ້າພະເຈົ້າກໍເປັນຈິງ.
[13]ຂ້າພະເຈົ້າມີຂໍ້ຄວາມຫລາຍຂໍ້ທີ່ຈະຂຽນມາເຖິງທ່ານ, ແຕ່ບໍ່ຢາກຂຽນດ້ວຍປາກກາ ແລະນ້ຳຫມຶກ.[14]ຂ້າພະເຈົ້າຫວັງວ່າຈະໄດ້ພົບທ່ານໃນໄວ
ໆ ນີ້, ແລະ ຈະໄດ້ເວົ້າກັນປາກຕໍ່ປາກ.[15]ຂໍສັນຕິສຸກຈົ່ງມີແກ່ທ່ານ ບັນດາເພື່ອນ ໆ ທາງນີ້ກໍຝາກຄວາມຄິດເຖິງມາຍັງທ່ານ
ຂໍທ່ານໄດ້ຝາກຄວາມຄິດເຖິງນີ້ແກ່ບັນດາເພື່ອນ ໆ ທາງພຸ້ນດ້ວຍອອກຊື່ຂອງທຸກຄົນ.

# ຢູດາ

1 [1]ຈາກຢູດາ, ຜູ້ຮັບໃຊ້ຂອງພຣະເຢຊູຄຣິດເຈົ້າ, ແລະ ນ້ອງຊາຍຂອງຢາໂກໂບ. ເຖິງຄົນທັງຫລາຍທີ່ໄດ້ຮັບການຊົງເອີ້ນ,
ຜູ້ເປັນທີ່ຮັກໃນພຣະເຈົ້າພຣະບິດາ, ແລະ ໄດ້ຮັບການຮັກສາໄວ້ເພື່ອພຣະເຢຊູຄຣິດເຈົ້າ:[2]ຂໍພຣະເມດຕາຄຸນ ແລະ ສັນຕິສຸກ ແລະ
ຄວາມຮັກເພີ່ມທະວີຄູນຍິ່ງຂຶ້ນແກ່ທ່ານດ້ວຍ.

[3]ທ່ານທີ່ຮັກທັງຫລາຍ, ຂະນະທີ່ຂ້າພະເຈົ້າພຽນພະຍາຍາມຂຽນເຖິງທ່ານ ກ່ຽວກັບຄວາມພົ້ນທົ່ວໄປຂອງເຮົານັ້ນ,
ຂ້າພະເຈົ້າຈຳເປັນຕ້ອງຂຽນເຕືອນສະຕິທ່ານ ໃຫ້ຕໍ່ສູ້ຢ່າງຈິງຈັງເພື່ອຄວາມເຊື່ອຊຶ່ງຄັ້ງຫນຶ່ງໄດ້ຊົງໂຜດມອບໄວ້ແກ່ຜູ້ເຊື່ອທັງຫລາຍແລ້ວ.
[4]ເພາະມີບາງຄົນໄດ້ແອບແຝງເຂົ້າມາຢູ່ໃນທ່າມກາງພວກເຂົາຢ່າງລັບໆ. ຄົນເຫລົ່ານີ້ຖືກເລັງໄວ້ເພື່ອການພິພາກສາພວກເຂົາ.
ເປັນຄົນອະທຳທີ່ບິດເບືອນພຣະຄຸນພຣະເຈົ້າຂອງເຮົາເຂົ້າສູ່ການຊົ່ວຊ້າລາມົກ, ແລະ ໄດ້ປະຕິເສດຈອມເຈົ້ານາຍ ແລະ
ອົງພຣະຜູ້ເປັນເຈົ້າອົງດຽວຂອງເຮົາຄືພຣະເຢຊູຄຣິດເຈົ້າ.
[5]ບັດນີ້ຂ້າພະເຈົ້າປາຖະຫນາຢ້ຳເຕືອນທ່ານວ່າ - ແມ່ນວ່າຄັ້ງຫນຶ່ງທ່ານໄດ້ຮູ້ຢູ່ແລ້ວວ່າ -
ອົງພຣະຜູ້ເປັນເຈົ້າໄດ້ຊົງຊ່ວຍຜູ້ຄົນອອກຈາກປະເທດເອຢິບ, ແຕ່ພາຍຫລັງພຣະອົງໄດ້ຊົງທຳລາຍຄົນເຫຼົ່ານັ້ນທີ່ບໍ່ເຊື່ອພຣະອົງ.[6]ແລະ
ບັນດາເທວະດາທີ່ບໍ່ໄດ້ຮັກສາສະຖານະການສິດອຳນາດຂອງຕົນ, ແຕ່ໄດ້ປະຖິ້ມບ່ອນຢູ່ອາໄສຂອງຕົນນັ້ນ -
ພຣະອົງໄດ້ຊົງຈອງຈຳພວກເຂົາດ້ວຍໂສ້ທວນອັນເປັນນິລັນໄວ້ໃນທີ່ມືດ, ເພື່ອການເພື່ອການພິພາກສາໃນວັນຍິ່ງໃຫຍ່ນັ້ນ.
[7]ເຊັ່ນດຽວກັບເມືອງໂຊໂດມ ແລະ ເມືອງໂກໂມຣາ ແລະ ເມືອງທັງຫລາຍທີ່ຢູ່ລອບໆພວກເຂົາ, ທີ່ໄດ້ຫລົງຕົນໄປກັບການຜິດປະເວນີ ແລະ
ຄວາມປາຖະຫນາໃນການຜິດສິນທຳທາງເພດ.
ພວກເຂົາຖືກສະແດງໃຫ້ເປັນຕົວຢ່າງຂອງຜູ້ທົນທຸກຈາກການລົງໂທດໃນໄຟໄໝ້ຢູ່ຕະຫລອດໄປເປັນນິດ.[8]ເຖິງປານນັ້ນໃນທາງດຽວກັນ,
ພວກເຫຼົ່ານີ້ກໍຍັງມົວຝັນເຮັດໃຫ້ຮ່າງກາຍຂອງຕົນຊົ່ວມົວໝອງ. ພວກເຂົາໝິ່ນປະໝາດສິດອຳນາດ, ແລະ
ພວກເຂົາດ່າວ່າເຖິງບັນດາສິ່ງທີ່ມີກຽດສັກສີຢູ່ເບື້ອງເທິງ.
[9]ແມ່ນແຕ່ທູດສະຫວັນມີຄາເອນ, ເມື່ອທ່ານໄດ້ຜິດຖຽງ ແລະ ໂຕ້ຖຽງກັບມານເລື່ອງຊາກສົບຂອງໂມເຊ,
ທ່ານເອງກໍຍັງບໍ່ກ້າພິພາກສາຫມິ່ນປະຫມາດເຂົາ. ທ່ານພຽງກ່າວວ່າ,
“ຂໍອົງພຣະຜູ້ເປັນເຈົ້າເປັນຜູ້ຕິຕຽນເຈົ້າເທີ້ນ!”[10]ແຕ່ຄົນເຫຼົ່ານີ້ກ່າວໂຈມຕີເຖິງສິ່ງທີ່ພວກເຂົາເອງບໍ່ເຂົ້າໃຈ. ແລະ
ສິ່ງທີ່ພວກເຂົາເຂົ້າໃຈຄວາມຮູ້ສຶກຕາມນິໄສຂອງສັດຮ້າຍທີ່ບໍ່ມີຄວາມຄິດ - ສິ່ງເຫລົ່ານີ້ເປັນສິ່ງທຳລາຍພວກເຂົາເອງ.[11]ວິບັດຈົ່ງມີແກ່ພວກເຂົາ!
ເພາະພວກເຂົາໄດ້ດຳເນີນໃນທາງຂອງກາອິນ, ແລະ ກະທຳຄວາມຜິດພາດເພາະເຫັນແກ່ລາງວັນກຳໄລຂອງບາລາອາມ.
ພວກເຂົາຈິບຫາຍໄປໃນການກະບົດຕາມຢ່າງຂອງໂກຣາ.
[12]ຄົນເຫລົ່ານີ້ເປັນຫີນໂສໂຄກທີ່ເຊື່ອງຕົວຢູ່ໃນງານລ້ຽງແຫ່ງຄວາມຮັກຂອງທ່ານ. ພວກເຂົາຊົມລົດອາຫານສະເພາະສຳລັບຕົນເອງຢ່າງບໍ່ອາຍ.
ພວກເຂົາເປັນ ເມກທີ່ບໍ່ມີນ້ຳທີ່ລອຍໄປຕາມລົມ. ພວກເຂົາເປັນດັ່ງຕົ້ນໄມ້ໃນລະດູໃບໄມ້ລົ່ນທີ່ບໍ່ມີຜົນ -
ຊຶ່ງຕາຍມາສອງຄັ້ງແລ້ວເພາະຖືກຖອນທັງຮາກ.
[13]ພວກເຂົາເປັນດັ່ງຄື້ນຟອງນ້ຳອັນຮ້າຍແຮງໃນມະຫາສະໝຸດທີ່ຊັດຟອງຄວາມອັບປະໂຫຍດຂອງຕົນອອກ.
ພວກເຂົາເປັນດາວທີ່ລອຍລັບເປັນຜູ້ທີ່ຕົກຢູ່ໃນຄວາມມືດຕຶບນິຣັນດອນ.
[14]ເອໂນກ, ເຊື້ອສາຍຜູ້ທີເຈັດນັບແຕ່ອາດາມ, ໄດ້ທຳນວາຍເຖິງພວກເຂົາວ່າ, “ເບິ່ງແມ! ອົງພຣະຜູ້ເປັນເຈົ້າກຳລັງສະເດັດມາພ້ອມກັບຜູ້ບໍຣິສຸດ
ເປັນພັນໆຂອງພຣະອົງ. ພຣະອົງສະເດັດມາເພື່ອການດຳເນີນການພິພາກສາທຸກຄົນ.
[15]ພຣະອົງສະເດັດມາເພື່ອພິພາກສາການອະທຳທຸກຢ່າງທີ່ພວກເຂົາໄດ້ເຮັດຢ່າງຊົ່ວຮ້າຍ ແລະ

 generated on Tue Jun 17 19:01:42 2025

ທຸກຖ້ອຍຄຳທີ່ຫຍາບຊ້າທັງຫລາຍທີ່ຄົນບາບໄດ້ກ່າວຮ້າຍຕໍ່ພຣະອົງ.”[16]ຄົນເຫຼົ່ານີ້ເປັນຄົນມັກຈົ່ມ, ເປັນຄົນໂຄສະນາ
ຊົ່ວຊ້າທີ່ດຳເນີນຕາມຄວາມປາຖະໜາອັນຊົ່ວຮ້າຍຂອງພວກເຂົາ. ພວກເຂົາເວົ້າອວດອ້າງເປັນຄົນຍ້ອງຍໍຄົນອື່ນເພື່ອຫວັງປະໂຫຍດຂອງຕົນ.
[17]ແຕ່ທ່ານທີ່ຮັກ, ຈົ່ງຈົດຈຳຄຳເວົ້າທີ່ກ່າວໄວ້ໃນອະດີດໂດຍເຫລົ່າອັກຄະສາວົກຂອງອົງພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງເຮົາ.
[18]ຊຶ່ງໄດ້ກ່າວເຖິງທ່ານ ວ່າ, “ໃນຍຸກສຸດທ້າຍຈະມີຄົນເຍາະເຍີ້ຍທີ່ດຳເນີນຕາມຄວາມປາຖະໜາອັນຊົ່ວຊ້າ
ຂອງພວກເຂົາ”[19]ຄົນເຫລົ່ານີ້ຄືຄົນທີ່ແຍກ, ຕົວອອກມາພວກເຂົາເປັນຂອງຝ່າຍໂລກ ແລະ ບໍ່ມີພຣະວິນຍານ.
[20]ແຕ່ທ່ານ ຜູ້ເປັນທີ່ຮັກ, ຈົ່ງສ້າງຕົວທ່ານໃນຄວາມເຊື່ອອັນບໍລິສຸດຂອງທ່ານແລະ ຈົ່ງອະທິຖານໃນພຣະວິນຍານບໍລິສຸດເຈົ້າ.
[21]ຈົ່ງຮັກສາຕົວຂອງທ່ານໄວ້ ໃນຄວາມຮັກຂອງພຣະເຈົ້າ ແລະ ຄອຍຖ້າພຣະກະລຸນາຂອງອົງພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງເຮົາທີ່ຊົງນຳຊີວິດນິຣັນດອນມາໃຫ້ແກ່ທ່ານ.
[22]ຈົ່ງເມດຕາຕໍ່ຜູ້ທີ່ສົງໄສ.[23]ຈົ່ງຊ່ວຍຜູ້ອື່ນດ້ວຍດຶງເຂົາອອກຈາກກອງໄຟ, ຈົ່ງເມດຕາຜູ້ອື່ນດ້ວຍຄວາມຢຳເກງ.
ຈົ່ງກຽດຊັງແມ່ນແຕ່ເສື້ອຜ້າທີ່ເປື້ອນເປີ້ດ້ວຍຣາຄະຕັນຫາ.
[24]ນີ້ແມ່ນສຳລັບຜູ້ທີ່ຊົງສາມາດຄຸ້ມຄອງການສະດຸດ ແລະ ເປັນເຫດໃຫ້ທ່ານຢືນຢູ່ ຕໍ່ພຣະພັກ ອັນສະຫງ່າຣາສີຂອງພຣະອົງ ໂດຍປ
າສະຈາກຄວາມຜິດ ແລະ ດ້ວຍຄວາມຍິນດີຢ່າງເຫລືອລົ້ນ.[25]ຕໍ່ພຣະເຈົ້າອົງພຣະຜູ້ ຊ່ວຍໃຫ້ພົ້ນຂອງເຮົາ ອົງດຽວຜ່ານອົງ ພຣະເຢຊູຄຣິດເຈົ້າ
ອົງພຣະຜູ້ເປັນເຈົ້າຂອງເຮົາ; ໂດຍພຣະສີຣິ ໂດຍຣິດເດດການຄຸ້ມຄອງ ແລະ ຣິດອຳນາດຕັ້ງແຕ່ບັດນີ້ ແລະ ນິຣັນດອນອາແມນ.

# ພຣະນິມິດ

## 1

[1]ພຣະນິມິດຂອງພະເຢຊູຄຣິດເຈົ້າ
ທີ່ພຣະເຈົ້າຊົງປຣະທານໃຫ້ແກ່ພຣະອົງເພື່ອສຳແດງຕໍ່ບັນດາຜູ້ຮັບໃຊ້ຂອງພຣະອົງວ່າຈະຕ້ອງເກີດຫຍັງຂຶ້ນແດ່ອີກບໍ່ຊ້ານີ້.
ພຣະອົງຊົງໃຫ້ເປັນທີ່ຮູ້ແຈ້ງໂດຍສົ່ງທູດສະຫວັນຂອງພຣະອົງໄປຫາໂຢຮັນຜູ້ຮັບໃຊ້ຂອງພຣະອົງ.
[2]ໂຢຮັນໄດ້ເປັນພະຍານກ່ຽວກັບຖ້ອຍຄຳທີ່ມາຈາກພຣະເຈົ້າ ແລະ ກ່ຽວກັບຄຳພະຍານຂອງພຣະເຢຊູຄຣິດເຈົ້າ, ຄືທຸກສິ່ງທີ່ທ່ານເຫັນ.
[3]ຄວາມສຸກຈົ່ງມີແກ່ບັນດາຜູ້ທີ່ອ່ານພຣະທັມເຫລັ້ມນີ້ອອກສຽງດັງ, ແລະ ແກ່ບັນດາຜູ້ທີ່ຮັບຟັງຖ້ອຍຄຳແຫ່ງຄຳທຳນວາຍນີ້, ແລະ
ບັນດາຜູ້ທີ່ເຊື່ອຟັງຕາມສິ່ງທີ່ຂຽນໄວ້ໃນພຣະທັມເຫລັ້ມນີ້, ເພາະວ່າເວລານັ້ນໃກ້ເຂົ້າມາແລ້ວ.

[4]ຈາກໂຢຮັນ, ເຖິງຄຣິສຕະຈັກທັງເຈັດໃນແຂວງເອເຊຍ: ຂໍໃຫ້ທ່ານທັງຫລາຍໄດ້ຮັບພຣະຄຸນ ແລະ ສັນຕິສຸກຈາກພຣະອົງຜູ້ຊົງດຳຣົງຢູ່,
ຜູ້ໄດ້ດຳຣົງຢູ່ ແລະ ຜູ້ທີ່ຈະສະເດັດມາ, ແລະຈາກພຣະວິນຍານທັງເຈັດທີ່ຢູ່ຕໍ່ໜ້າພຣະທີ່ນັ່ງຂອງພຣະອົງ,[5]ແລະ ຈາກພຣະເຢຊູຄຣິດເຈົ້າ,
ຜູ້ຊົງເປັນພະຍານທີ່ສັດຊື່ ແລະ ຊົງເປັນຜູ້ທຳອິດທີ່ໄດ້ເປັນຂຶ້ນມາຈາກຕາຍ, ແລະ ເປັນຜູ້ຊົງຄອບຄອງເຫນືອບັນດາກະສັດໃນໂລກ.
ແຕ່ພຣະອົງຊົງຮັກພວກເຮົາ ແລະໄດ້ປົດປ່ອຍພວກເຮົາຈາກຄວາມບາບ ດ້ວຍພຣະໂລຫິດຂອງພຣະອົງ.
[6]ພຣະອົງຊົງຕັ້ງເຮົາໃຫ້ເປັນອານາຈັກຫນຶ່ງ ແລະ ເປັນພວກປະໂລຫິດຂອງພຣະເຈົ້າ ແລະ ພຣະບິດາຂອງພຣະອົງ ຂໍພຣະກຽດ ແລະ
ຣິດທານຸພາບຈົ່ງເປັນຂອງພຣະເຢຊູຄຣິດເຈົ້າຕະຫລອດໄປເປັນນິດເຖີ້ນ. ອາແມນ.
[7]ເບິ່ງແມ, ພຣະອົງກຳລັງສະເດັດມາເທິງເມກ; ຕາທຸກດວງຈະເຫັນພຣະອົງ, ລວມເຖິງຄົນທັງຫລາຍທີ່ແທງພຣະອົງຈະເຫັນພຣະອົງເຫມືອນກັນ.
ມະນຸດທຸກເຜົ່າພັນທົ່ວໂລກຈະຮ້ອງໄຫ້ຮ່ຳໄຮເພາະພຣະອົງ. ຈະເປັນໄປຢ່າງນັ້ນ, ອາແມນ.[8]"ເຮົາເປັນອາລະຟາ ແລະ ໂອເມຄາ,"
ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຜູ້ຊົງເປັນຢູ່, ຜູ້ເຄີຍເປັນຢູ່ ແລະ ຜູ້ທີ່ຈະສະເດັດມາ ຜູ້ຊົງຣິດອຳນາດຍິ່ງໃຫຍ່ສູງສຸດ.
[9]ຂ້າພຣະເຈົ້າ, ຄືໂຢຮັນພີ່ນ້ອງຂອງທ່ານທັງຫລາຍ ແລະ ຜູ້ມີສ່ວນຮ່ວມໃນຄວາມຍາກລຳບາກ ແລະ ໃນຣາຊອານາຈັກ ແລະ
ໃນຄວາມພຽນອົດທົນຊຶ່ງເປັນປະສົບການໃນອົງພຣະເຢຊູຄຣິດເຈົ້າ ຂ້າພຣະເຈົ້າຢູ່ທີ່ເກາະປາຕາໂມເພາະເຫດພຣະຄັມຂອງພຣະເຈົ້າ ແລະ
ຄຳພະຍານກ່ຽວກັບພຣະເຢຊູເຈົ້າ.[10]ຂ້າພຣະເຈົ້າໄດ້ຢູ່ໃນພຣະວິນຍານໃນວັນຂອງອົງພຣະຜູ້ເປັນເຈົ້າ.
ຂ້າພຣະເຈົ້າໄດ້ຍິນພຣະສຸຣະສຽງດັງເຫມືອນຢ່າງສຽງແກມາຈາກເບື້ອງຫລັງຂອງຂ້າພຣະເຈົ້າ.[11]ໄດ້ກ່າວວ່າ
"ຈົ່ງຂຽນສິ່ງທີ່ທ່ານເຫັນລົງໄປໃນປຶ້ມ, ແລະ ສົ່ງໄປໃຫ້ຄຣິສຕະຈັກທັງເຈັດ ຄືຄຣິສຕະຈັກທີ່ເມືອງເອເຟໂຊ, ເມືອງຊະມີນາ, ເມືອງເປຄາໂມ,
ເມືອງທົວເຕຣາ, ເມືອງຊາເດ, ເມືອງຟີລາເດັນເຟັຍ ແລະເມືອງລາວດີເກອາ".
[12]ແລ້ວຂ້າພຣະເຈົ້າກໍຫັນກັບມາເບິ່ງວ່າເປັນພຣະສຸຣະສຽງຂອງຜູ້ໃດກ່າວກັບຂ້າພຣະເຈົ້າ ແລະ
ເມື່ອຫັນກັບມາແລ້ວຂ້າພຣະເຈົ້າກໍເຫັນຄັນຕະກຽງເປັນຄຳເຈັດອັນ[13]ໃນທ່າມກາງຄັນຕະກຽງເຫລົ່ານັ້ນມີຜູ້ຫນຶ່ງເຫມືອນບຸດມະນຸດ
ນຸ່ງເສື້ອລ່າມກວມຕີນ ແລະ ມີຜ້າບ່ຽງຄຳຄຽນເອິກຂອງພຣະອົງ.
[14]ຫົວ ແລະ ຜົມຂອງພຣະອົງຂາວເຫມືອນຂົນແກະສີຂາວ - ເຫມືອນດັ່ງຫິມະ, ຕາຂອງພຣະອົງເຫມືອນດັ່ງແປວໄຟ.
[15]ຕີນຂອງພຣະອົງເຫລື້ອມເຫມືອນດັ່ງທອງເຫລືອງກ້ຽງ ທີ່ຖືກຫລອມໃຫ້ບໍຣິສຸດໃນເຕົາຫລອມແລ້ວ, ແລະ
ສຽງຂອງພຣະອົງເຫມືອນດັ່ງສຽງນ້ຳຕົກຕາດໃຫຍ່.[16]ພຣະອົງຊົງຖືດວງດາວເຈັດດວງໄວ້ໃນມືຂວາຂອງພຣະອົງ ແລະ
ມີດາບສອງຄົມອອກມາຈາກປາກຂອງພຣະອົງ ໃບໜ້າຂອງພຣະອົງເຫລື້ອມເຫມືອນດັ່ງຕາເວັນທີ່ສ່ອງແສງແຮງກ້າທີ່ສຸດ.
[17]ເມື່ອຂ້າພຣະເຈົ້າເຫັນພຣະອົງ, ຂ້າພຣະເຈົ້າກໍລົ້ມລົງໃກ້ຕີນຂອງພຣະອົງເຫມືອນດັ່ງຄົນຕາຍ. ແຕ່ພຣະອົງຊົງວາງມືເທິງຕົວຂອງຂ້າພະເຈົ້າ
ແລະ ໄດ້ກ່າວວ່າ "ຢ່າຢ້ານເລີຍ ເຮົາເປັນຜູ້ຕົ້ນ ແລະ ເປັນຜູ້ປາຍ,[18]ແລະ ເປັນຜູ້ມີຊີວິດຢູ່. ເຮົາໄດ້ຕາຍແລ້ວ, ແຕ່ເບິ່ງແມ,
ເຮົາຍັງມີຊີວິດຢູ່ຕະຫລອດໄປເປັນນິດ! ແລະ ເຮົາຖືລູກກະແຈແຫ່ງຄວາມຕາຍ ແລະ ແດນມໍຣະນາ.
[19]ສະນັ້ນ ຈົ່ງຂຽນສິ່ງທີ່ເຈົ້າເຫັນແລ້ວ, ຄືສິ່ງທີ່ກຳລັງເປັນຢູ່ໃນຂະນະນີ້, ແລະ ສິ່ງທີ່ຈະເກີດຂຶ້ນຫລັງຈາກນີ້.
[20]ນີ້ແມ່ນຄວາມເລິກລັບຂອງດາວທັງເຈັດດວງຊຶ່ງເຈົ້າເຫັນໃນມືຂວາຂອງເຮົາ ແລະ ຄັນຕະກຽງເປັນຄຳທັງເຈັດອັນນັ້ນກໍຄື
ດາວເຈັດດວງໄດ້ແກ່ບັນດາທູດສະຫວັນແຫ່ງຄຣິສຕະຈັກທັງເຈັດ ແລະ ຄັນຕະກຽງຄຳເຈັດອັນນັ້ນກໍຄື: ຄຣິສຕະຈັກທັງເຈັດ."


generated on Tue Jun 17 19:01:42 2025

2 [1]"ຈົ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງເອເຟໂຊວ່າ: 'ພຣະອົງຜູ້ຊົງຖືດາວທັງເຈັດດວງໄວ້ໃນພຣະຫັດຂວາ ແລະ
ຊົງດຳເນີນຢູ່ທ່າມກາງຄັນຕະກຽງທອງຄຳທັງເຈັດນັ້ນກ່າວດັ່ງນີ້, [2]ວ່າ "ເຮົາຮູ້ຈັກການກະທຳຂອງເຈົ້າ
ແລະເຮົາຮູ້ຈັກພາຣະກິດອັນຍາກລຳບາກ ແລະ ຄວາມພຽນອົດທົນຂອງເຈົ້າ ເຮົາຮູ້ວ່າເຈົ້າບໍ່ຍອມທົນຕໍ່ພວກຄົນຊົ່ວຮ້າຍ
ເຮົາຮູ້ວ່າເຈົ້າໄດ້ທົດສອບພວກທີ່ອ້າງຕົນວ່າເປັນອັກຄະສາວົກ ແຕ່ບໍ່ເປັນຄວາມຈິງ ແລະ ເຈົ້າກໍພົບວ່າພວກເຂົາເປັນຄົນຂີ້ຕົວະ.

[3]ເຮົາຮູ້ວ່າພວກເຈົ້າມີຄວາມອົດທົນ ແລະພວກເຈົ້າຕ້ອງທົນທຸກຢ່າງຫລວງຫລາຍເພາະນາມຂອງເຮົາ
ແລະບໍ່ໄດ້ທໍ້ຖອຍ[4]ແຕ່ເຮົາມີຂໍ້ທີ່ຈະຕິຕຽນພວກເຈົ້າຄື: ເຈົ້າໄດ້ປະຖິ້ມຄວາມຮັກຄັ້ງທຳອິດຂອງເຈົ້າ.[5]ເພາະສະນັ້ນຈົ່ງລະນຶກ
ເຖິງສະພາບດັ້ງເດີມທີ່ເຈົ້າຕົກລົງມາແລ້ວນັ້ນ. ຈົ່ງກັບໃຈເສຍໃຫມ່ ແລະ ກະທຳຕາມສິ່ງທີ່ເຈົ້າໄດ້ເຄີຍເຮັດມາໃນຕອນຕົ້ນນັ້ນ
ຖ້າບໍ່ດັ່ງນັ້ນເຮົາຈະມາຫາເຈົ້າ ແລະ ເຮົາຈະຍ້າຍຄັນຕະກຽງຂອງເຈົ້າອອກຈາກທີ່ຂອງມັນ ເວັ້ນໄວ້ແຕ່ເຈົ້າຈະກັບໃຈເສຍໃຫມ່.
[6]ແຕ່ວ່າເຈົ້າຍັງມີຂໍ້ດີຢູ່ຄື: ເຈົ້າກຽດຊັງຄວາມປະພຶດຂອງພວກນີໂກລາຍເຕ, ທີ່ເຮົາເອງກໍກຽດຊັງເຫມືອນກັນ.[7]ໃຜມີຫູຟັງ
ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ. ຜູ້ໃດທີ່ມີຊັຍຊະນະ ເຮົາຈະໃຫ້ຜູ້ນັ້ນມີສິດກິນຜົນຈາກຕົ້ນໄມ້ແຫ່ງຊີວິດ
ທີ່ມີຢູ່ໃນເມືອງສຸຂະເສີມຂອງພຣະເຈົ້າ.
[8]ຈົ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊະມີນາວ່າ: 'ເຫລົ່ານີ້ເປັນຖ້ອຍຄຳຈາກພຣະອົງ ທີ່ເປັນຜູ້ຕົ້ນ ແລະ ເປັນຜູ້ປາຍ
ຜູ້ຊົງສິ້ນພຣະຊົນແລ້ວ ແລະ ກັບມີຊີວິດອີກຊົງ ກ່າວດັ່ງນີ້:[9]ເຮົາຮູ້ຈັກຄວາມຍາກລຳບາກ ແລະຍາກຈົນຂອງເຈົ້າ, ແຕ່ແທ້ຈິງແລ້ວເຈົ້າກໍຮັ່ງມີ.
ເຮົາຮູ້ຈັກການກ່າວຮ້າຍຂອງພວກທີ່ອ້າງຕົນວ່າເປັນຢິວ, ແຕ່ພວກເຂົາບໍ່ໄດ້ເປັນແທ້ ພວກເຂົາເປັນພັກພວກຂອງມານຊາຕານ.
[10]ຢ່າຢ້ານຄວາມທົນທຸກທີ່ເຈົ້າຈະໄດ້ຮັບນັ້ນ. ເບິ່ງແມ! ມານຮ້າຍກຳລັງຈະຈັບພວກເຈົ້າບາງຄົນໃສ່ຄຸກເພື່ອທົດລອງໃຈພວກເຈົ້າ, ແລະເ
ຈົ້າທັງຫລາຍຈະທົນທຸກລຳບາກເປັນເວລາສິບວັນ. ເຈົ້າຈົ່ງສັດຊື່ຈົນເຖິງວັນຕາຍ ແລະ ເຮົາຈະມອບມົງກຸດແຫ່ງຊີວິດໃຫ້ແກ່ເຈົ້າ.[11]ໃຜມີຫູຟັງ
ກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ. ຜູ້ທີ່ມີຊັຍຊະນະຈະບໍ່ໄດ້ຮັບອັນຕະຣາຍຈາກຄວາມຕາຍຄັ້ງທີສອງເລີຍ.
[12]ຈົ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງເປຄາໂມວ່າ: 'ເຫລົ່ານີ້ເປັນຖ້ອຍຄຳຈາກພຣະອົງຜູ້ຖືດາບສອງຄົມ:
[13]"ເຮົາຮູ້ຈັກທີ່ຢູ່ຂອງເຈົ້າ ຊຶ່ງເປັນບັນລັງຂອງຊາຕານຢູ່ທີ່ນັ້ນ, ເຖິງປານນັ້ນເຈົ້າກໍຕັ້ງຫມັ້ນໃນນາມຂອງເຮົາ.
ເຮົາຮູ້ຈັກວ່າເຈົ້າບໍ່ໄດ້ປະຕິເສດຄວາມເຊື່ອໃນເຮົາ ເຖິງວ່າໃນເວລາທີ່
ອັນຕິປາຜູ້ເປັນພະຍານທີ່ສັດຊື່ຂອງເຮົາໄດ້ຖືກຂ້າທ່າມກາງພວກເຈົ້າໃນບ່ອນທີ່ມານຊາຕານຢູ່.
[14]ແຕ່ເຮົາມີຂໍ້ຕໍ່ວ່າເຈົ້າບາງຂໍ້ຄື: ທີ່ນັ້ນມີບາງຄົນໃນພວກເຈົ້າຍຶດຖືຄຳສອນຂອງບາລາອາມ
ຜູ້ທີ່ໄດ້ສອນບາຫລາກໃຫ້ວາງສິ່ງສະດຸດຕໍ່ຫນ້າເຊື້ອສາຍຂອງອິສະຣາເອນໃຫ້ເຮັດບາບ
ຄືຊັກຊວນໃຫ້ພວກເຂົາກິນອາຫານທີ່ບູຊາຮູບເຄົາຣົບແລະ ເຮັດຜິດສິລະທັມທາງເພດລ່ວງປະເວນີ.[15]ເຊັ່ນດຽວກັນ,
ມີຄົນໃນພວກເຈົ້າທີ່ຍຶດຄຳສອນຂອງພວກນີໂກລາຍເຕດ້ວຍ.
[16]ເພາະສະນັ້ນຈົ່ງກັບໃຈເສຍໃຫມ່, ຖ້າບໍ່ດັ່ງນັ້ນ ເຮົາຈະມາຫາເຈົ້າໂດຍໄວ, ແລະ
ເຮົາຈະຕໍ່ສູ້ກັບຄົນເຫລົ່ານັ້ນດ້ວຍດາບທີ່ອອກຈາກປາກຂອງເຮົາ.[17]ໃຜມີຫູຟັງ ກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ.
ສຳລັບຜູ້ທີ່ມີຊັຍຊະນະ, ເຮົາຈະໃຫ້ມານາທີ່ເຊື່ອງໄວ້ ແລະ ຈະໃຫ້ຫີນຂາວທີ່ມີຊື່ໃຫມ່ຈາຣຶກໄວ້ເທິງກ້ອນຫີນນັ້ນ
ເປັນຊື່ຊຶ່ງບໍ່ມີໃຜຮູ້ເລີຍນອກຈາກຜູ້ທີ່ໄດ້ຮັບເທົ່ານັ້ນ.
[18]ຈົ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງທົວເຕຣາວ່າ: 'ເຫລົ່ານີ້ເປັນຖ້ອຍຄຳຈາກພຣະບຸດຂອງພຣະເຈົ້າ,
ຜູ້ຊົງມີດວງຕາເຫມືອນຢ່າງແປວໄຟ ແລະ ຊົງມີຕີນເຫມືອນດັ່ງທອງເຫລືອງກ້ຽງໄດ້ກ່າວດັ່ງນີ້ວ່າ:[19]"ເຮົາຮູ້ຈັກເຖິງສິ່ງທີ່ເຈົ້າໄດ້ກະທຳໄປ
ທັງຄວາມຮັກ ແລະ ຄວາມເຊື່ອ ແລະ ການປະຕິບັດ ແລະຄວາມອົດທົນຂອງເຈົ້າ ແລະ
ຮູ້ວ່າສິ່ງທີ່ເຈົ້າໄດ້ເຮັດເມື່ອບໍ່ດົນມານີ້ດີກວ່າສິ່ງທີ່ເຈົ້າໄດ້ເຮັດມາແຕ່ຕອນທຳອິດ.
[20]ແຕ່ເຮົາມີຂໍ້ຕິຕຽນເຈົ້າແດ່ຄື: ເຈົ້າຍອມທົນຟັງຍິງທີ່ຊື່ວ່າເຢເຊເບນ ຜູ້ທີ່ອ້າງຕົນເອງວ່າເປັນຜູ້ປະກາດພຣະຄັມຂອງພຣະເຈົ້າ
ນາງສອນແລະລໍ້ລວງບັນດາຜູ້ຮັບໃຊ້ຂອງເຮົາໃຫ້ລ່ວງປະເວນີ ແລະ ກິນອາຫານທີ່ໄດ້ບູຊາຮູບເຄົາຣົບແລ້ວ.
[21]ເຮົາໃຫ້ໂອກາດນາງເພື່ອຈະໄດ້ກັບໃຈໃຫມ່, ແຕ່ນາງກໍບໍ່ປະສົງຈະກັບໃຈຈາກການລ່ວງປະເວນີຂອງນາງ.
[22]ເບິ່ງແມ! ເຮົາຈະຖິ້ມນາງລົງໃນຕຽງນອນຂອງຄົນປ່ວຍ, ແລະ ຖິ້ມພວກທີ່ລ່ວງປະເວນີກັບນາງໄວ້ໃນຄວາມລຳບາກຍິ່ງໃຫຍ່,
ນອກຈາກວ່າພວກເຂົາຈະກັບໃຈຈາກການປະພຶດຊົ່ວທີ່ພວກເຂົາໄດ້ເຮັດນຳກັນກັບນາງ[23]ເຮົາຈະປະຫານລູກໆຂອງນາງໃຫ້ຕາຍ,
ແລ້ວຄຣິສຕະຈັກທັງຫລາຍກໍຈະຮູ້ວ່າເຮົາເປັນຜູ້ກວດສອບຄວາມຄິດ ແລະ ຈິດໃຈຂອງມະນຸດທຸກຄົນ ແລະ
ເຮົາຈະໃຫ້ກັບເຈົ້າທັງຫລາຍແຕ່ລະຄົນຕາມຄວາມປະພຶດຂອງພວກເຈົ້າ.
[24]ສຳລັບພວກເຈົ້າທີ່ເຫລືອຢູໃນເມືອງທົວເຕຣາ ຄືຜູ້ບໍ່ຖືຄຳສອນນີ້, ແລະບໍ່ຮູ້ຈັກສິ່ງທີ່ເຂົາເອີ້ນຄວາມລັບເລິກຂອງຊາຕານ ເຮົາຈະບອກແກ່ເຈົ້າວ່າ
'ເຮົາຈະບໍ່ມອບພາຣະອື່ນແກ່ພວກເຈົ້າ ເຖິງຢ່າງໃດກໍດີ[25]ຈົ່ງຍຶດຫມັ້ນສິ່ງທີ່ພວກເຈົ້າມີຢູ່ແລ້ວໄວ້ຈົນກວ່າເຮົາຈະມາ.
[26]ແລະ ຄົນທີ່ມີຊັຍຊະນະ ແລະ ຜູ້ທີ່ໄດ້ກະທຳຕາມສິ່ງທີ່ເຮົາໄດ້ກະທຳຈົນເຖິງທີ່ສຸດ
ເຮົາຈະປະທານສິດທິອຳນາດເຫນືອບັນດາປະຊາຊາດກັບເຂົາ.[27]ແລະ
ຜູ້ນັ້ນຈະບັງຄັບບັນຊາພວກເຂົາດ້ວຍຄ້ອນເຫລັກເຫມືອນຢ່າງຊ່າງຫມໍ້ດິນທີ່ທຳລາຍຫມໍ້ດິນໃຫ້ແຕກຫມຸ່ນເສຍ.
[28]ເຫມືອນຢ່າງທີ່ເຮົາໄດ້ຮັບອຳນາດຈາກພຣະບິດາເຈົ້າຂອງເຮົາແລ້ວ ແລະ ເຮົາຈະມອບດາວເພັກ(ປະຈຳຮຸ່ງອາລຸນ) ໃຫ້ກັບເຂົາດ້ວຍ.
[29]ໃຜມີຫູຟັງກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ.

# 3

1ຈຶ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງຊາເດ ວ່າ:
'ເຫລົ່ານີ້ເປັນຖ້ອຍຄຳຂອງພຣະອົງຜູ້ຊຶ່ງມີພຣະວິນຍານທັງເຈັດຂອງພຣະເຈົ້າ ແລະ ຊຶ່ງມີດາວເຈັດດວງນັ້ນ ກ່າວວ່າ
"ເຮົາຮູ້ຈັກເຖິງສິ່ງທີ່ເຈົ້າໄດ້ກະທຳໄປຄື: ເຈົ້າໄດ້ຊື່ວ່າມີຊີວິດຢູ່ເຖິງແມ່ນວ່າເຈົ້າຕາຍແລ້ວກໍຕາມ.
2ເຈົ້າຈົ່ງຕື່ນຂຶ້ນ ແລະ
ຈົ່ງເສີມກຳລັງໃຫ້ກັບສ່ວນທີ່ເຫລືອຢູ່ຊຶ່ງໃກ້ຈະຕາຍແລ້ວນັ້ນ,
ເພາະເຮົາພົບວ່າການກະທຳຂອງເຈົ້ານັ້ນຍັງບໍ່ຄົບບໍຣິບູນໃນສາຍຕາຂອງພຣະເຈົ້າຂອງເຮົາ.

3ເຫດສະນັ້ນ, ເຈົ້າຈົ່ງລະນຶກເຖິງສິ່ງທີ່ເຈົ້າເຄີຍໄດ້ຮັບ ແລະ ໄດ້ຍິນ. ຈົ່ງເຊື່ອຟັງ, ແລະ ຈົ່ງກັບໃຈໃຫມ່. ເພາະຖ້າເຈົ້າບໍ່ຕື່ນຂຶ້ນ,
ເຮົາຈະມາເຫມືອນດັ່ງຂະໂມຍ ແລະເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະມາຫາເຈົ້າ.
4ແຕ່ຍັງມີບາງຄົນໃນພວກເຈົ້າທີ່ເມືອງຊາເດທີ່ບໍ່ໄດ້ເຮັດໃຫ້ເສື້ອຜ້າຂອງຕົນສົກກະປົກ ແລະ ພວກເຂົາຈະເດີນໄປກັບເຮົາ ນຸ່ງຊຸດສີຂາວ
ເພາະວ່າເຂົາເປັນຄົນທີ່ເຫມາະສົມ.
5ຄົນທີ່ມີຊັຍຊະນະກໍຈະນຸ່ງເສື້ອສີຂາວ, ແລະ ເຮົາຈະບໍ່ລົບຊື່ຂອງເຂົາອອກຈາກຫນັງສືແຫ່ງຊີວິດ, ແລະ
ເຮົາຈະຮັບຮອງຊື່ຂອງເຂົາຊ້ອງຫນ້າພຣະບິດາເຈົ້າຂອງເຮົາ, ແລະ ຕໍ່ຫນ້າບັນດາທູດສະຫວັນຂອງພຣະອົງ.
6ໃຜມີຫູຟັງກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ.
7ຈົ່ງຂຽນເຖິງທູດສະຫວັນ ຂອງພຣະເຈົ້າໃນຄຣິສຕະຈັກ ທີ່ເມືອງຟີລາເດັນເຟຍວ່າ: ເຫລົ່ານີ້ຄືຖ້ອຍຄຳຈາກພຣະອົງຜູ້ບໍຣິສຸດ ແລະ ຜູ້ຊຶ່ງສັດຈິງ
ຜູ້ຊຶ່ງຖືລູກກະແຈຂອງດາວິດ, ຜູ້ຊຶ່ງເປີດແລ້ວຈະບໍ່ມີຜູ້ໃດປິດໄດ້, ຜູ້ຊຶ່ງປິດແລ້ວຈະບໍ່ມີຜູ້ເປີດໄດ້ນັ້ນ ກ່າວດັ່ງນີ້ວ່າ.
8"ເຮົາຮູ້ຈັກສິ່ງທີ່ເຈົ້າໄດ້ກະທຳໄປ. ເບິ່ງແມ, ເຮົາວາງປະຕູທີ່ເປີດໄວ້ ແລະ ບໍ່ມີໃຜປິດໄດ້ໄວ້ຕໍ່ຫນ້າພວກເຈົ້າ.
ເຮົາຮູ້ວ່າເຈົ້າມີກຳລັງພຽງຫນ້ອຍດຽວ ແຕ່ເຖິງປານນັ້ນເຈົ້າກໍຖືຮັກສາຖ້ອຍຄຳຂອງເຮົາ ແລະບໍ່ໄດ້ປະຕິເສດນາມຂອງເຮົາ.
9ເບິ່ງແມ! ບັນດາຄົນທີ່ເປັນພັກພວກຂອງມານຊາຕານ, ພວກທີ່ອ້າງວ່າ ພວກເຂົາເປັນຢິວ ແຕ່ບໍ່ແມ່ນຄວາມຈິງ; ພວກເຂົາກຳລັງຂີ້ຕົວະຢູ່.
ເຮົາຈະເຮັດໃຫ້ພວກເຂົາມາກາບລົງທີ່ຕີນຂອງເຈົ້າ ແລະ ໃຫ້ເຂົາຮູ້ວ່າເຮົາຮັກເຈົ້າ.
10ເພາະວ່າເຈົ້າຖືຮັກສາຄຳສັ່ງ ຂອງເຮົາດ້ວຍຄວາມອົດທົນ,
ເຮົາຈະເຝົ້າຮັກສາເຈົ້າໃຫ້ພົ້ນຈາກຊ່ວງເວລາແຫ່ງການທົດລອງຊຶ່ງຈະມາເຖິງຄົນທົ່ວທັງໂລກ, ເພື່ອຈະທົດລອງຄົນທັງຫລາຍທີ່ຢູ່ໃນໂລກ.
11ເຮົາຈະມາໄວໆນີ້. ຈົ່ງຢຶດຫມັ້ນໃນສິ່ງທີ່ເຈົ້າມີຢູ່ນັ້ນ ເພື່ອວ່າຈະບໍ່ໃຫ້ໃຜຊິງເອົາມົງກຸດແຫ່ງຊັຍຊະນະຂອງເຈົ້າໄປຈາກເຈົ້າໄດ້.
12ເຮົາຈະຕັ້ງຜູ້ທີ່ຊັຍຊະນະ ໃຫ້ເປັນເສົາຫລັກຢູ່ໃນພຣະວິຫານຂອງພຣະເຈົ້າຂອງເຮົາ ແລະ ເຂົາຈະບໍ່ອອກໄປຈາກພຣະວິຫານອີກເລຍ
ເຮົາຈະຈາຣຶກພຣະນາມແຫ່ງພຣະເຈົ້າຂອງເຮົາໄວ້ເທິງຕົວເຂົາ ແລະຊື່ເມືອງຂອງພຣະເຈົ້າຂອງເຮົາ (ຄືນະຄອນເຢຣູຊາເລັມໃຫມ່,
ທີ່ລົງມາຈາກສະຫວັນຈາກພຣະເຈົ້າຂອງເຮົາ), ແລະ ນາມໃຫມ່ຂອງເຮົາດ້ວຍ.
13ໃຜມີຫູຟັງກໍໃຫ້ຟັງຂໍ້ຄວາມ
ທີ່ພຣະວິນຍານກ່າວກັບຄຣິສຕະຈັກທັງຫລາຍ.
14ຈົ່ງຂຽນເຖິງທູດສະຫວັນຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງລາວດີເກອາວ່າ: 'ເຫລົ່ານີ້ເປັນຖ້ອຍຄຳຂອງພຣະອົງຜູ້ເປັນອາແມນ,
ພຣະອົງຊຶ່ງເປັນພະຍານທີ່ສັດຊື່ ແລະ ຍຸດຕິທັມຊຶ່ງເປັນຜູ້ຄອບຄອງເຫນືອສິ່ງສາຣະພັດທີ່ພຣະເຈົ້າຊຶ່ງສ້າງນັ້ນ,
ກ່າວວ່າ
15ເຮົາຮູ້ເຖິງສິ່ງທີ່ເຈົ້າໄດ້ເຮັດໄປ ຄືວ່າເຈົ້າບໍ່ເຢັນ ແລະ ບໍ່ຮ້ອນ ເຮົາຢາກໃຫ້ເຈົ້າເຢັນ ຫລື ຮ້ອນ!
16ເພາະວ່າເຈົ້າເປັນແຕ່ອຸ່ນໆ ບໍ່ເຢັນ
ແລະ ບໍ່ຮ້ອນດັ່ງນັ້ນເຮົາຈະຄາຍເຈົ້າອອກຈາກປາກຂອງເຮົາເສຍ.
17ເພາະເຈົ້າເວົ້າວ່າ ຂ້ອຍຮັ່ງມີ, ຂ້ອຍມີຊັບສົມບັດຫລວງຫລາຍ, ແລະ ຂ້ອຍບໍ່ຕ້ອງການສິ່ງໃດເລີຍ. ແຕ່ເຈົ້າບໍ່ຮູ້ບໍ່ວ່າເຈົ້າເປັນຄົນທຸກໄຮ້ເຂັນໃຈ,
ເປັນຄົນຫນ້າສົງສານຊໍ່າໃດ, ເຈົ້າຍາກຈົນ, ຕາບອດ, ແລະ ເປືອຍກາຍຢູ່.
18ຈົ່ງຟັງຄຳແນະນຳຂອງເຮົາ: ໃຫ້ໄປຊື້ຄຳທີ່ຫລອມດ້ວຍໄຟຈາກເຮົາ
ເພື່ອເຈົ້າຈະໄດ້ຮັ່ງມີ, ແລະໃຫ້ຊື້ເສື້ອຜ້າສີຂາວສົດໃສເພື່ອຈະໄດ້ນຸ່ງໃຫ້ພົ້ນຈາກຄວາມອັບອາຍທີ່ຕ້ອງເປືອຍກາຍ, ແລະ
ຊື້ຢາມາຢອດຕາຂອງເຈົ້າເພື່ອເຈົ້າຈະໄດ້ເຫັນຮຸ່ງ.
19ເຮົາແອບສອນທຸກຄົນທີ່ເຮົາຮັກ, ແລະ ເຮົາສອນວ່າພວກເຂົາຄວນມີຊີວິດແນວໃດ. ເພາະສະນັ້ນ, ຈົ່ງມີຄວາມກະຕືລືລົ້ນ ແລະ ກັບໃຈໃຫມ່.
20ເບິ່ງແມ, ເຮົາຢືນເຄາະຢູ່ທີ່ປະຕູ. ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະ ເປີດປະຕູ, ເຮົາຈະເຂົ້າໄປໃນບ້ານຂອງເຂົາ ແລະ
ຈະຮັບປະທານອາຫານຮ່ວມກັບເຂົາ, ແລະເຂົາຈະຮັບປະທານອາຫານຮ່ວມກັບເຮົາ.
21ບຸກຄົນທີ່ຊັຍຊະນະ, ເຮົາຈະໃຫ້ເຂົາມີສິດທີ່ນັ່ງກັບເຮົາເທິງພຣະທີ່ນັ່ງຂອງເຮົາ ເຫມືອນຢ່າງທີ່ເຮົາມີຊັຍຊະນະແລ້ວ,
ແລະໄດ້ນັ່ງກັບພຣະບິດາເຈົ້າຂອງເຮົາເທິງບັນລັງຂອງພຣະອົງ.
22ໃຜມີຫູຟັງກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານໄດ້ກ່າວກັບຄຣິສຕະຈັກທັງຫລາຍ.


generated on Tue Jun 17 19:01:42 2025

4 [1]ຫລັງຈາກນັ້ນ ຂ້າພຣະເຈົ້າກໍໄດ້ເຫັນນິມິດຢ່າງຫນຶ່ງເຫັນປະຕູທີ່ເປີດອອກຢູ່ໃນສະຫວັນ. ແລະ ພຣະສຸຣະສຽງທຳອິດ
ທີ່ຂ້າພຣະເຈົ້າໄດ້ຍິນກ່າວ ກັບຂ້າພຣະເຈົ້າ ເຫມືອນຢ່າງສຽງແກວ່າ "ຈົ່ງຂຶ້ນມາທີ່ນີ້ ແລະ
ເຮົາຈະສະແດງໃຫ້ເຈົ້າເຫັນສິ່ງທີ່ຈະຕ້ອງເກີດຂຶ້ນໃນພາຍຫນ້າ."[2]ໃນທັນໃດນັ້ນຂ້າພຣະເຈົ້າກໍຢູ່ໃນພຣະວິນຍານ, ແລະ
ຂ້າພຣະເຈົ້າໄດ້ເຫັນຣາຊບັນລັງຕັ້ງຢູ່ໃນສະຫວັນ, ແລະ ມີທ່ານຜູ້ຫນຶ່ງປະທັບເທິງພຣະທີ່ນັ່ງນັ້ນ.[3]ໃບຫນ້າຂອງພຣະອົງເປັນແກ້ວມະນີໂຊດ
ແລະ ແກ້ວພິລາ. ອ້ອມຮອບບັນລັງນັ້ນມີຮຸ້ງກິນນ້ຳສີຄ້າຍຄືແສງແກ້ວມໍຣະກົດ.

[4]ອ້ອມຮອບພຣະທີ່ນັ່ງນັ້ນມີບັນລັງອີກຊາວສີ່ບັນລັງ, ມີຜູ້ອາວຸໂສຊາວສີ່ທ່ານນັ່ງຢູ່ເທິງບັນລັງເຫລົ່ານັ້ນ, ນຸ່ງເສື້ອລ່າມສີຂາວ, ແລະ
ສວມມົງກຸດຄຳເທິງຫົວຂອງພວກເພິ່ນ.[5]ຈາກບັນລັງນັ້ນມີຟ້າແມບເຫລື້ອມທັງສຽງຟ້າຮ້ອງດັງສະຫນັ່ນຢູ່ບໍ່ຂາດ.
ຕໍ່ຫນ້າບັນລັງມີຕະກຽງໄຕ້ໄວ້ຢູ່ເຈັດໜ່ວຍ, ເຊິ່ງແມ່ນວິນຍານທັງເຈັດຂອງພຣະເຈົ້າ.
[6]ຕໍ່ຫນ້າພຣະທີ່ນັ່ງນັ້ນເປັນເຫມືອນຢ່າງທະເລແກ້ວມະນີ. ໃນລະຫວ່າງກາງບັນລັງແລະ ອ້ອມຮອບບັນລັງນັ້ນ ມີສິ່ງທີ່ມີຊີວິດສີ່ໂຕ,
ທີ່ມີຕາເຕັມໂຕທັງຂ້າງຫນ້າ ແລະຂ້າງຫລັງ.
[7]ສິ່ງທີ່ມີຊີວິດຕົນທີ່ຫນຶ່ງເຫມືອນສິງ, ຕົນທີ່ສອງນັ້ນເຫມືອນງົວນ້ອຍ, ຕົນທີ່ສາມນັ້ນມີຫນ້າເຫມືອນມະນຸດ,
ຕົນທີ່ສີ່ເຫມືອນນົກອິນຊີທີ່ກຳລັງບິນຢູ່.[8]ສິ່ງມີຊີວິດທັງສີ່ຕົນ ແຕ່ລະຕົນມີປີກຫົກປີກ ແລະ ມີຕາເຕັມທັງຂ້າງນອກ ແລະ ຂ້າງໃນ ແລະ
ພວກເພິ່ນຮ້ອງຕະຫລອດເວັນ ແລະ ຄືນຢ່າງບໍ່ເຊົາບໍ່ຂາດວ່າ "ບໍຣິສຸດ ບໍຣິສຸດ ບໍຣິສຸດ ຄືອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງຣິດອຳນາດຍິ່ງໃຫຍ່
ອົງທີ່ໄດ້ດຳຣົງຢູ່, ອົງທີ່ດຳຣົງຢູ່, ແລະ ອົງທີ່ຈະສະເດັດມາ."
[9]ເມື່ອໃດກໍຕາມສິ່ງທີ່ມີຊີວິດເຫລົ່ານັ້ນເປັ່ງສຽງຍົກຍ້ອງສະຫງ່າຣາສີ, ພຣະກຽດ, ແລະ ຂອບພຣະຄຸນແກ່ພຣະອົງຜູ້ປະທັບເທິງຣາຊບັນລັງ
ແລະ ຜູ້ຊົງມີພຣະຊົນຢູ່ຕະຫລອດໄປເປັນນິດນັ້ນ,[10]ຜູ້ອາວຸດໂສທັງຊາວສີ່ທ່ານກໍຂາບລົງຊ້ອງຫນ້າພຣະອົງຜູ້ປະທັບເທິງຣາຊບັນລັງນັ້ນ
ນະມັດສະການພຣະອົງຜູ້ຊົງພຣະຊົນຢູ່ຕະຫລອດໄປເປັນນິດ ແລະ ຖອດມົງກຸດອອກວາງຕໍ່ຫນ້າຣາຊບັນລັງຮ້ອງວ່າ,
[11]"ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະເຈົ້າຂອງຂ້ານ້ອຍທັງຫລາຍພຣະອົງສົມຄວນທີ່ຈະໄດ້ຮັບສະຫງ່າຣາສີ ພຣະກຽດ ແລະ ຣິດອຳນາດ
ດ້ວຍວ່າພຣະອົງໄດ້ສ້າງສັພະທຸກສິ່ງທັງປວງຂຶ້ນແລ້ວໂດຍພຣະປະສົງ ແລະ ສັພະທຸກສິ່ງເຫລົ່ານີ້ກໍດຳຣົງຢູ່ ແລະ ມີຊີວິດຢູ່."


generated on Tue Jun 17 19:01:42 2025

5 [1]ແລະ ໃນມືຂວາຂອງພຣະອົງຜູ້ປະທັບເທິງບັນລັງນັ້ນ, ຂ້າພຣະເຈົ້າເຫັນຫນັງສືມ້ວນຫນຶ່ງ ທີ່ມີຄຳຂຽນໄວ້ທັງຂ້າງໃນ ແລະຂ້າງນອກ.
ຊຶ່ງມີຕຣາປະທັບທັງເຈັດດວງ.[2]ຂ້າພຣະເຈົ້າໄດ້ເຫັນທູດສະຫວັນທີ່ມີຣິດຕິນຫນຶ່ງ ປະກາດດ້ວຍສຽງດັງວ່າ
"ໃຜເປັນຜູ້ສົມຄວນເປີດຫນັງສືມ້ວນນີ້ ແລະ ແກະຕຣາປະທັບນັ້ນອອກ?

[3]ບໍ່ມີຜູ້ໃດໃນສະຫວັນ ຫລື ເທິງແຜ່ນດິນໂລກ ຫລື ໃຕ້ແຜ່ນດິນໂລກທີ່ສາມາດເປີດຫນັງສືມ້ວນນັ້ນອອກ ຫລືອ່ານຫນັງສືນັ້ນໄດ້.
[4]ແລ້ວຂ້າພຣະເຈົ້າກໍຮ້ອງໄຫ້ຢ່າງຂົມຂື່ນເພາະບໍ່ມີຜູ້ໃດສົມຄວນເປີດຫນັງສືມ້ວນນັ້ນອອກອ່ານໄດ້.
[5]ແລ້ວມີທ່ານຜູ້ຫນຶ່ງໃນພວກຜູ້ອາວຸໂສບອກກັບຂ້າພຣະເຈົ້າວ່າ "ຢ່າຮ້ອງໄຫ້ເລີຍ ເບິ່ງແມ! ສິງແຫ່ງເຜົ່າຢູດາ ຊຶ່ງເປັນຮາກເຫງົ້າຂອງດາວິດ
ຊົງມີຊັຍຊະນະແລ້ວ ພຣະອົງຈຶ່ງຊົງສາມາດເປີດຫນັງສື ແລະ ແກະຕຣາທັງເຈັດດວງໄດ້."
[6]ຂ້າພຣະເຈົ້າໄດ້ເຫັນພຣະເມສານ້ອຍຢືນຢູ່ລະຫວ່າງບັນລັງກັບສິ່ງທີ່ມີຊີວິດທັງສີ່ຕົນ ແລະ ທ່າມກາງພວກຜູ້ອາວຸໂສ.
ພຣະເມສານ້ອຍນີ້ເບິ່ງຄືວ່າຖືກຂ້າແລ້ວ. ພຣະເມສານ້ອຍນັ້ນມີເຂົາເຈັດເຂົາ ແລະ ມີດວງຕາເຈັດດວງ;
ເຊິ່ງເປັນພຣະວິນຍານທັງເຈັດຂອງພຣະເຈົ້າທີ່ຖືກສົ່ງອອກໄປທົ່ວແຜ່ນດິນໂລກ.[7]ພຣະເມສານ້ອຍຊົງເຂົ້າມາ ແລະ
ຊົງຮັບມ້ວນຫນັງສືຈາກມືຂວາຂອງພຣະອົງຜູ້ປະທັບເທິງບັນລັງນັ້ນ.
[8]ເມື່ອພຣະເມສານ້ອຍຮັບຫນັງສືມ້ວນນັ້ນແລ້ວ, ສິ່ງມີຊີວິດທັງສີ່ ແລະ ຜູ້ອາວຸໂສຊາວສີ່ທ່ານນັ້ນ
ກໍຂາບລົງທີ່ຕີນຂອງພຣະເມສານ້ອຍນັ້ນແຕ່ລະຄົນຖືພິນ ແລະຂັນຄຳທີ່ບັນຈຸເຄື່ອງຫອມ ຊຶ່ງເປັນຄຳອະທິຖານຂອງບັນດາຜູ້ເຊື່ອ.
[9]ພວກເຂົາຮ້ອງເພງບົດໃຫມ່ວ່າ: "ພຣະອົງຊົງເປັນຜູ້ສົມຄວນຈະຮັບຫນັງສືມ້ວນ ແລະ ຊົງແກະຕຣາປະທັບຫນັງສືນັ້ນອອກ.
ເພາະພຣະອົງຊົງຖືກຂ້າແລ້ວ, ແລະ ຊົງໄຖ່ຄົນດ້ວຍພຣະໂລຫິດເພື່ອຖວາຍພຣະເຈົ້າ ຄືຄົນຈາກທຸກເຜົ່າ ທຸກພາສາ, ທຸກຊົນຊາດ ແລະ
ທຸກປະຊາຊາດ.[10]ພຣະອົງຊົງເຮັດໃຫ້ເຂົາເປັນອານາຈັກ ແລະ ເປັນປະໂລຫິດເພື່ອຮັບໃຊ້ພຣະເຈົ້າຂອງເຮົາ
ແລະພວກເຂົາເຫລົ່ານັ້ນຈະໄດ້ຄອບຄອງເທິງແຜ່ນດິນໂລກ."
[11]ແລ້ວຂ້າພຣະເຈົ້າກໍໄດ້ເຫັນ ແລະ ໄດ້ຍິນສຽງຂອງຝູງທູດສະຫວັນຢ່າງຫລວງຫລາຍເປັນໂກດໆແສນໆຢູ່ຮອບພຣະຣາຊບັນລັງ
ອ້ອມຮອບສິ່ງມີຊີວິດທັງສີ່ ແລະ ອ້ອມຮອບບັນດາຜູ້ອາວຸໂສນັ້ນ.[12]ພວກເຂົາຮ້ອງສຽງດັງວ່າ "ພຣະເມສານ້ອຍຜູ້ຖືກຂ້າແລ້ວນັ້ນ
ຊົງສົມຄວນໄດ້ຮັບຣິດອຳນາດ, ຊັບສົມບັດ, ສະຕິປັນຍາ, ພະລັງອຳນາດ, ກຽດສັກສີ, ສະຫງ່າຣາສີ ແລະ ຄຳສັນຣະເສີນ."
[13]ແລ້ວຂ້າພຣະເຈົ້າໄດ້ຍິນສຽງສິ່ງຊົງສ້າງທັງໝົດ ທັງໃນສະຫວັນ ແລະ ເທິງແຜ່ນດິນໂລກ ແລະ ໃຕ້ແຜ່ນດິນໂລກ ໃນມະຫາສະຫມຸດ,
ທຸກສິ່ງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ "ຂໍໃຫ້ຄຳສັນຣະເສີນ, ກຽດສັກສີ, ສະຫງ່າຣາສີ, ແລະອຳນາດທີ່ຈະຄອບຄອງ
ຈົ່ງມີແກ່ພຣະອົງຜູ້ຊົງປະທັບເທິງຣາຊບັນລັງ ແລະ ແກ່ພຣະເມສານ້ອຍຕະລອດໄປເປັນນິດເຖີ້ນ."[14]ແລະສິ່ງມີຊີວິດທັງສີ່ນັ້ນກໍຮ້ອງວ່າ
"ອາແມນ!" ແລະບັນດາຜູ້ອາວຸໂສກໍຂາບລົງ ແລະ ນະມັດສະການ.

6 [1]ແລະຂ້າພຣະເຈົ້າເຫັນພຣະເມສານ້ອຍແກະຕຣາປະທັບດວງທີຫນຶ່ງໃນເຈັດດວງນັ້ນ,
ແລະຂ້າພຣະເຈົ້າໄດ້ຍິນສິ່ງມີຊີວິດຕົນທີຫນຶ່ງໃນສີ່ໂຕນັ້ນຮ້ອງສຽງດັ່ງເຫມືອນຢ່າງສຽງຟ້າຮ້ອງວ່າ "ມາ!"[2]ຂ້າພຣະເຈົ້າກໍເບິ່ງ ແລະ
ມີມ້າສີຂາວຕົວຫນຶ່ງອອກມາ. ຜູ້ທີ່ຂີ່ມ້າຕົວນັ້ນຖືລູກທະນູ, ແລະ ທ່ານໄດ້ຮັບມົງກຸດ ແລ້ວທ່ານກໍອອກໄປຢ່າງຜູ້ມີຊັຍ ແລະ
ເພື່ອກໍາເອົາຊັຍຊະນະ.

[3]ເມື່ອພຣະເມສານ້ອຍຊົງແກະຕຣາປະທັບດວງທີສອງ, ຂ້າພຣະເຈົ້າໄດ້ຍິນສິ່ງທີ່ມີຊີວິດຕົນທີສອງຮ້ອງວ່າ "ມາ!"[4]ແລະ
ມ້າອີກຕົວຫນຶ່ງອອກມາເປັນມ້າສີແດງເຂັ້ມຜູ້ທີ່ຂີ່ມ້າຕົວນີ້ໄດ້ຮັບມອບຫມາຍໃຫ້ເອົາສັນຕິສຸກໄປຈາກແຜ່ນດິນໂລກ,
ເພື່ອໃຫ້ມະນຸດທັງປວງສູ້ຮົບຂ້າຟັນກັນ ແລະ ທ່ານຜູ້ນີ້ໄດ້ຮັບມອບດາບໃຫຍ່ດວງຫນຶ່ງ.
[5]ເມື່ອພຣະເມສານ້ອຍແກະຕຣາປະທັບດວງທີສາມ ຂ້າພຣະເຈົ້າກໍໄດ້ຍິນສິ່ງທີ່ມີຊີວິດຕົນທີສາມຮ້ອງວ່າ "ມາ!"
ແລ້ວຂ້າພຣະເຈົ້າເຫັນມ້າສີດໍາຕົວຫນຶ່ງ ແລະ
ຜູ້ທີ່ຂີ່ມ້າຕົວນີ້ຖືຕາຊັ່ງ[6]ແລ້ວຂ້າພຣະເຈົ້າກໍໄດ້ຍິນສຽງເຫມືອນຢ່າງສຽງເວົ້າດັ່ງອອກມາຈາກທ່າມກາງສິ່ງມີຊີວິດທັງສີ່ນັ້ນວ່າ
"ເຂົ້າບາເລລິດຫນຶ່ງຕໍ່ແຮງງານມື້ຫນຶ່ງ ແລະເຂົ້າເດືອຍສາມລິດຕໍ່ແຮງງານມື້ຫນຶ່ງ. ແຕ່ຢ່າເຮັດໃຫ້ນ້ຳມັນຫມາກກອກ ແລະ
ເຫລົ້າອະງຸ່ນເສຍຫາຍ."
[7]ເມື່ອພຣະເມສານ້ອຍແກະຕຣາປະທັບດວງທີສີ່, ຂ້າພຣະເຈົ້າກໍໄດ້ຍິນສຽງສິ່ງມີຊີວິດຕົນທີສີ່ຮ້ອງວ່າ
"ມາ!"[8]ແລ້ວຂ້າພຣະເຈົ້າເຫັນມ້າສີຂຽວອ່ອນຕົວຫນຶ່ງ ຜູ້ທີ່ຂີ່ມ້ານີ້ມີຊື່ວ່າມັດຈຸຣາດ ແລະ ແດນມໍຣະນາກໍຕິດຕາມມາດ້ວຍ
ພຣະອົງຊົງໃຫ້ທັງສອງນີ້ມີອໍານາດເຫນືອແຜ່ນດິນໂລກຫນຶ່ງໃນສີ່ສ່ວນ ທີ່ຈະທໍາລາຍດ້ວຍຄົມດາບ ດ້ວຍຄວາມອຶດຢາກ ດ້ວຍໂຣກລະບາດ
ແລະ ດ້ວຍສັດຮ້າຍແຫ່ງແຜ່ນດິນ.
[9]ເມື່ອພຣະເມສານ້ອຍແກະຕຣາປະທັບດວງທີຫ້າ, ຂ້າພຣະເຈົ້າກໍເຫັນດວງວິນຍານທີ່ໃຕ້ແທ່ນບູຊາ
ເຊິ່ງເປັນວິນຍານຂອງຄົນທັງຫລາຍທີ່ຖືກຂ້າເພາະປະກາດພຣະຄັມຂອງພຣະເຈົ້າ ແລະ ເພາະຄໍາພະຍານທີ່ເຂົາຢຶດຖືນັ້ນ.
[10]ເຂົາທັງຫລາຍຮ້ອງສຽງດັ່ງວ່າ "ຂ້າແດ່ທ່ານຜູ້ປົກຄອງສູງສຸດ, ຜູ້ບໍຣິສຸດ ແລະ ສັດຊື່ ອີກດົນປານໃດພຣະອົງ
ຈຶ່ງຈະຊົງພິພາກສາຄົນທີ່ຢູ່ເທິງແຜ່ນດິນໂລກ ແລະ
ແກ້ແຄ້ນແທນເລືອດຂອງພວກຂ້ານ້ອຍ?"[11]ແລ້ວພຣະອົງປຣະທານເສື້ອຄຸມສີຂາວແກ່ພວກເຂົາແຕ່ລະຄົນ,
ແລະຊົງບອກເຂົາໃຫ້ລໍຖ້າຕໍ່ໄປອີກຫນ້ອຍຫນຶ່ງ ຈົນກວ່າຜູ້ຮ່ວມຮັບໃຊ້ ແລະ
ພີ່ນ້ອງຊາຍຍິງຂອງເຂົາຈະຖືກຂ້າເຫມືອນຢ່າງພວກເຂົາຄົບຈໍານວນແລ້ວ.
[12]ເມື່ອພຣະເມສານ້ອຍແກະຕຣາປະທັບດວງທີຫົກ, ຂ້າພຣະເຈົ້າເຫັນແຜ່ນດິນໄຫວຢ່າງໃຫຍ່ ດວງຕາເວັນກາຍເປັນສີດໍາມືດຄືເຄື່ອງໄວ້, ແລະ
ດວງເດືອນເຕັມດວງກໍກາຍເປັນສີແດງຄືເລືອດ.[13]ແລະ ດວງດາວທັງຫລາຍເທິງທ້ອງຟ້າກໍຕົກລົງມາເທິງແຜ່ນດິນ
ດັ່ງຫມາກເດື່ອດິບຕົກລົງຈາກຕົ້ນເພາະລົມແຮງພັດ.[14]ທ້ອງຟ້າກໍຫົດເຂົ້າເຫມືອນກັບຫນັງສືທີ່ຖືກມ້ວນໄວ້ ແລະ ພູທັງຫລາຍ ແລະ
ເກາະທຸກເກາະກໍຖືກເລື່ອນໄປຈາກບ່ອນເກົ່າ.
[15]ແລ້ວກະສັດທັງຫລາຍໃນໂລກ ແລະ ພວກຄົນທີ່ສໍາຄັນ, ແລະ ບັນດານາຍທະຫານໃຫຍ່, ພວກເສດຖີ, ພວກຜູ້ມີອໍານາດ ແລະ
ທຸກຄົນທັງທີ່ເປັນທາດຫລືເປັນອິສຣະ, ຕ່າງກໍໄປລີ້ຢູ່ໃນຖ້ໍາ ແລະ ລີ້ຢູ່ໃຕ້ໂງ່ນຫີນຕາມພູຕ່າງໆ.[16]ພວກເຂົາຮ້ອງບອກກັບພູ ແລະ ໂງ່ນຫີນວ່າ,
"ຈົ່ງເຈື່ອນລົງເທິງພວກເຮົາ! ແລະ ບັງພວກເຮົາໄວ້ ໃຫ້ພົ້ນຈາກສາຍຕາຂອງພຣະອົງຜູ້ນັ່ງເທິງບັນລັງ ແລະ
ພົ້ນຈາກຄວາມໂກດຮ້າຍຂອງພຣະເມສານ້ອຍແນ່ຖ້ອນ.[17]ເພາະວ່າມື້ສໍາຄັນແຫ່ງຄວາມໂກດຮ້າຍອັນໃຫຍ່ຂອງພຣະອົງມາເຖິງແລ້ວ ແລະ
ໃຜຈະສາມາດທົນໄດ້ແດ່?"


generated on Tue Jun 17 19:01:42 2025

# 7

[1]ຫລັງຈາກນັ້ນ ຂ້າພຣະເຈົ້າເຫັນທູດສະຫວັນສີ່ອົງຢືນຢູ່ທີ່ມູມທັງສີ່ຂອງແຜ່ນດິນໂລກ, ຢັບຢັ້ງລົມທັງສີ່ຂອງແຜ່ນດິນໂລກໄວ້
ເພື່ອບໍ່ໃຫ້ລົມພັດເທິງບົກ ເທິງທະເລ ຫລືເທິງຕົ້ນໄມ້ທຸກຕົ້ນ[2]ແລ້ວຂ້າພຣະເຈົ້າເຫັນທູດສະຫວັນອົງຫນຶ່ງປາກົດຂຶ້ນມາຈາກທິດຕາເວັນອອກ
ຄືຕຣາປະທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່
ແລະທ່ານຮ້ອງດ້ວຍສຽງດັງຕໍ່ທູດສະຫວັນທັງສີ່ຜູ້ຊຶ່ງໄດ້ຮັບອະນຸຍາດໃຫ້ເພື່ອທຳອັນຕະລາຍແຜ່ນດິນແລະທະເລນັ້ນວ່າ[3]"ຈົ່ງຢ່າທຳອັນຕະລາຍແກ່ແຜ່ນດິນໂລກ,
ທະເລ, ຫລືຕົ້ນໄມ້ ຈົນກວ່າເຮົາຈະໄດ້ປະທັບຕຣາໃສ່ເທິງຫນ້າຜາກຂອງບັນດາຜູ້ຮັບໃຊ້ຂອງພຣະເຈົ້າຂອງເຮົາ."

[4]ຂ້າພຣະເຈົ້າໄດ້ຍິນວ່າຈຳນວນຜູ້ທີ່ໄດ້ຮັບການປະທັບຕຣາມີ: ແສນສີ່ຫມື່ນສີ່ພັນຄົນ,
ທີ່ໄດ້ຮັບການປະທັບຕຣາແລ້ວມາຈາກສິບສອງເຜົ່າໃນອິສະຣາເອນ:
[5]ພວກທີ່ມາຈາກເຜົ່າຢູດາທີ່ໄດ້ຮັບການປະທັບຕຣາມີຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າຣູເບັນມີຫນຶ່ງຫມື່ນສອງພັນຄົນ,
ພວກທີ່ມາຈາກເຜົ່າກາດມີຫນຶ່ງຫມື່ນສອງພັນຄົນ,[6]ພວກທີ່ມາຈາກເຜົ່າອາເຊ ຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າເນັບທາລີມີ
ຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າມານາເຊມີ ຫນຶ່ງຫມື່ນສອງພັນຄົນ.
[7]ພວກທີ່ມາຈາກເຜົ່າຊີເມໂອນມີ ຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າເລວີມີ ຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າອິດຊາຄາມີ
ຫນຶ່ງຫມື່ນສອງພັນຄົນ,[8]ພວກທີ່ມາຈາກເຜົ່າເຊບູໂລນມີ ຫນຶ່ງຫມື່ນສອງພັນຄົນ, ພວກທີ່ມາຈາກເຜົ່າໂຢເຊັບມີ ຫນຶ່ງຫມື່ນສອງພັນຄົນ,
ພວກທີ່ມາຈາກເຜົ່າເບັນຢາມິນທີ່ໄດ້ຮັບການປະທັບຕາມີ ຫນຶ່ງຫມື່ນສອງພັນຄົນ.
[9]ຫລັງຈາກນັ້ນມາ ຂ້າພຣະເຈົ້າກໍເບິ່ງເຫັນ, ແລະ ມີຜູ້ຄົນຢ່າງຫລວງຫລາຍທີ່ບໍ່ມີໃຜນັບຈຳນວນໄດ້ ທີ່ມາຈາກປະຊາຊາດ, ທຸກເຜົ່າ,
ທຸກຊົນຊາດ ແລະ ທຸກພາສາ ຢືນຢູ່ຕໍ່ຫນ້າບັນລັງ ແລະ ຕໍ່ຫນ້າພຣະເມສານ້ອຍ.[10]ພວກເຂົານຸ່ງເສື້ອຄຸມສີຂາວ ແລະ ຖືໃບຕານຢູ່ໃນມື
ພວກເຂົາຮ້ອງສຽງດັງວ່າ "ຄວາມລອດພົ້ນເປັນຂອງພຣະເຈົ້າຂອງເຮົາຜູ້ປະທັບເທິງບັນລັງ ແລະ ເປັນຂອງພຣະເມສານ້ອຍ!"
[11]ທູດສະຫວັນທັງຫມົດທີ່ຢືນຢູ່ຮອບພຣະຣາຊບັນລັງຮອບຜູ້ອາວຸໂສ ແລະຮອບສິ່ງມີຊີວິດທັງສີ່ນັ້ນ, ກໍຂາບລົງຕໍ່ຫນ້າພຣະບັນລັງ ແລະ
ນະມັດສະການພຣະເຈົ້າ[12]ແລະກ່າວວ່າ "ອາແມນ! ຄຳສັນຣະເສີນ, ພຣະສະຫງ່າຣາສີ, ພຣະປັນຍາ, ຄຳໂມທະນາຂອບພຣະຄຸນ, ພຣະກຽດ,
ຣິດທານຸພາບ, ແລະ ພຣະກຳລັງ ຈົ່ງມີແດ່ພຣະເຈົ້າຂອງເຮົາຕະຫລອດໄປເປັນນິດ ອາແມນ!"
[13]ແລ້ວຄົນຫນຶ່ງໃນພວກຜູ້ອາວຸໂສນັ້ນ, ຖາມຂ້າພຣະເຈົ້າວ່າ "ຄົນທີ່ສວມເສື້ອຄຸມສີຂາວເຫລົ່ານີ້ຄືໃຜ? ແລະ
ພວກເຂົາມາຈາກໃສ?"[14]ຂ້າພຣະເຈົ້າຕອບທ່ານວ່າ "ທ່ານເອີຍ, ທ່ານເອງກໍຊົງຮູ້ຢູ່ແລ້ວ" ແລະ ທ່ານຈຶ່ງບອກຂ້າພຣະເຈົ້າວ່າ
"ຄົນເຫລົ່ານີ້ເປັນຄົນທີ່ມາຈາກຄວາມຍາກລຳບາກຄັ້ງຍິ່ງໃຫຍ່
ພວກເຂົາຊຳຣະເສື້ອຜ້າຂອງເຂົາດ້ວຍເລືອດຂອງພຣະເມສານ້ອຍຈົນຂາວສະອາດ.
[15]ເພາະເຫດນີ້, ເຂົາທັງຫລາຍຈຶ່ງໄດ້ຢືນຢູ່ຕໍ່ຫນ້າພຣະຣາຊບັນລັງຂອງພຣະເຈົ້າ, ແລະ
ນະມັດສະການພຣະອົງໃນພຣະວິຫານຂອງພຣະອົງທັງກາງເວັນ ແລະ ກາງຄືນ ແລະ
ພຣະອົງຜູ້ປະທັບເທິງຣາຊບັນລັງນັ້ນຊົງຄຸ້ມຄອງພວກເຂົາ.[16]ພວກເຂົາຈະບໍ່ອຶດເຂົ້າຢາກນ້ຳອີກຕໍ່ໄປເລີຍ
ຕາເວັນຫລືແສງແດດອັນຮ້ອນກ້າຈະບໍ່ເຜົາໄຫມ້ພວກເຂົາ.
[17]ເພາະພຣະເມສານ້ອຍຜູ້ຊົງປະທັບຢູ່ທ່າມກາງຣາຊບັນລັງນັ້ນຈະຊົງເປັນພຣະຜູ້ລ້ຽງດູພວກເຂົາ ແລະ
ຈະຊົງນຳພວກເຂົາໄປຍັງນ້ຳພຸແຫ່ງຊີວິດ, ແລະ ຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງເຂົາທັງຫລາຍ."

8 [1]ເມື່ອພຣະເມສານ້ອຍແກະຕາປະທັບດວງທີເຈັດ, ຟ້າສະຫວັນກໍງຽບສະຫງັດປະມານເຄິ່ງຊົ່ວໂມງ.
[2]ຈາກນັ້ນຂ້າພຣະເຈົ້າເຫັນທູດສະຫວັນເຈັດອົງຢືນຢູ່ຕໍ່ຫນ້າພຣະເຈົ້າ, ແລະ ແກເຈັດອັນໄດ້ຖືກມອບໃຫ້ທູດສະຫວັນເຫລົ່ານັ້ນ.

[3]ມີທູດສະຫວັນອີກອົງຫນຶ່ງ, ຖືຫມໍ້ຄໍາໃສ່ເຄື່ອງຫອມບູຊາ, ເຂົາມາຢືນຢູ່ຕໍ່ຫນ້າແທ່ນຖວາຍເຄື່ອງຫອມບູຊາ.
ບັນດາເຄື່ອງຫອມບູຊາຫລວງຫລາຍໄດ້ຖືກມອບໃຫ້ແກ່ເຂົາເພື່ອເຂົາຈະມອບຖວາຍພ້ອມຄໍາອະທິຖານທັງຫມົດຂອງບັນດາຜູ້ເຊື່ອເທິງແທ່ນຖວາຍເຄື່ອງຫອມບູຊາ
[4]ຄວັນຂອງເຄື່ອງຫອມບູຊາພ້ອມກັບຄໍາອະທິຖານຂອງບັນດາຜູ້ເຊື່ອກໍລອຍຈາກມືຂອງທູດສະຫວັນຂຶ້ນ ໄປຕໍ່ຫນ້າພຣະເຈົ້າ.
[5]ທູດສະຫວັນນໍາເອົາຫມໍ້ບັນຈຸເຄື່ອງຫອມບູຊາມາ ແລະ ຕື່ມໄຟຈາກແທ່ນບູຊາລົງໄປໃນຫມໍ້ນັ້ນຈົນເຕັມ ຈາກນັ້ນເຂົາຈຶ່ງເທມັນລົງມາເທິງໂລກນີ້
ເຮັດໃຫ້ເກີດສຽງຟ້າຮ້ອງສະນັ່ນ ເກີດຟ້າແມບສະຫວ່າງຈ້າ ແລະເກີດແຜ່ນດິນໄຫວ.
[6]ທູດສະຫວັນທັງເຈັດທີ່ມີແກເຈັດອັນຕຽມພ້ອມທີ່ຈະເປົ່າແກ. [7]ເມື່ອທູດສະຫວັນອົງທີຫນຶ່ງເປົ່າແກຂຶ້ນກໍມີພາຍຸເຫັບ ແລະ
ລູກໄຟປະສົມກັນກັບເລືອດ ຖືກເທລົງມາເທິງແຜ່ນດິນໂລກເພື່ອຈະເຜົາຫນຶ່ງສ່ວນສາມຂອງໂລກ ຫນຶ່ງສວນສາມຂອງຕົ້ນໄມ້ຖືກເຜົາໃຫມ້ ແລະ
ພືດສີຂຽວກໍຖືກເຜົາໃຫມ້ໄປຫມົດ.
[8]ທູດສະຫວັນອົງທີສອງເປົ່າແກຂອງເຂົາ, ມີບາງສິ່ງທີ່ເຫມືອນກັບພູທີ່ລຸກເປັນໄຟຖືກຖິ້ມລົງມາທີ່ທະເລ
ຫນຶ່ງສ່ວນສາມຂອງທະເລກາຍເປັນເລືອດ, [9]ຫນຶ່ງສ່ວນສາມຂອງສິ່ງຊົງສ້າງທີ່ມີຊີວິດໃນທະເລຖືກຂ້າໃຫ້ຕາຍ,
ຫນຶ່ງສ່ວນສາມຂອງເຮືອໃຫຍ່ຖືກທໍາລາຍ.
[10]ທູດສະຫວັນອົງທີສາມເປົ່າແກຂອງເຂົາ, ມີດາວໃຫຍ່ດວງຫນຶ່ງສະຫວ່າງ ເຫມືອນກະບອງຈາກຟ້າຕົກລົງມາເທິງແມ່ນ້ໍາ, ຫນຶ່ງສ່ວນສາມ
ແລະໃນບໍ່ນ້ໍາພຸທັງຫລາຍ[11]ດວງດາວນີ້ ມີຊື່ວ່າ "ຂົມ". ຫນຶ່ງສ່ວນສາມຂອງນ້ໍາທັງຫມົດກາຍເປັນນ້ໍາຂົມ ແລະ
ຄົນຈໍານວນຫລວງຫລາຍຕ້ອງຕາຍສາເຫດເພາະນ້ໍາຂົມນີ້.
[12]ທູດສະຫວັນອົງທີສີ່ເປົ່າແກຂອງເຂົາ, ຫນຶ່ງສ່ວນສາມຂອງຕາເວັນຖືກໂຈມຕີ ລວມເຖິງຫນຶ່ງສ່ວນສາມຂອງດວງຈັນ ແລະ
ດວງດາວເຫລົ່ານີ້ຈຶ່ງຖືກເຮັດໃຫ້ມືດໄປ ຫນຶ່ງສ່ວນສາມຂອງກາງເວັນ ແລະ ຫນຶ່ງສ່ວນສາມຂອງກາງຄືນຈຶ່ງບໍ່ມີຄວາມສະຫວ່າງ.
[13]ຂ້າພຣະເຈົ້າເບິ່ງ, ແລະ ຂ້າພຣະເຈົ້າໄດ້ຍິນສຽງນົກອິນຊີໂຕຫນຶ່ງທີ່ກໍາລັງບິນຢູ່ໃນທ້ອງຟ້າ ແລະ ຮ້ອງສຽງດັ່ງວ່າ "ວິບັດ, ວິບັດ, ວິບັດ,
ແກ່ຄົນເຫລົ່ານັ້ນທີ່ອາໄສຢູ່ເທິງແຜ່ນດິນໂລກ ເພາະແກທີ່ເຫລືອຢູ່ກໍາລັງຈະຖືກເປົ່າໂດຍທູດສະຫວັນທັງສາມອົງ"


generated on Tue Jun 17 19:01:42 2025

9 [1]ຈາກນັ້ນທູດສະຫວັນອົງທີຫ້າກໍເປົ່າແກ. ຂ້າພຣະເຈົ້າໄດ້ເຫັນດາວດວງຫນຶ່ງຕົກລົງມາຈາກທ້ອງຟ້າມາຍັງແຜ່ນດິນໂລກ.
ດາວດວງນັ້ນໄດ້ຮັບມອບກະແຈເພື່ອໄຂເປີດຊ່ອງນາຮົກຂຸມເລິກ.[2]ເຂົາໄຂເປີດຊ່ອງນາຮົກຂຸມເລິກນັ້ນ, ແລະ
ມີຄວັນໄຟພຸ່ງອອກມາເຫມືອນຄວັນຈາກເຕົາຫລອມຂະຫນາດໃຫຍ່ ຕາເວັນ ແລະ ຟ້າອາກາດກໍມືດໄປເພາະຄວັນທີ່ພຸ່ງອອກຈາກນາຮົກນັ້ນ.

[3]ມີຝູງຕັກແຕນອອກມາຈາກຄວັນນັ້ນເພື່ອອອກມາສູ່ແຜ່ນດິນໂລກ, ແລະ
ພວກມັນໄດ້ຮັບອຳນາດໃຫ້ຕອດໄດ້ເຫມືອນກັບເຫລົ່າແມງງອດເທິງແຜ່ນດິນໂລກນີ້.[4]ພວກມັນຖືກຫ້າມບໍ່ໃຫ້ທຳລາຍຕົ້ນຫຍ້າ, ພືດ ແລະ
ຕົ້ນໄມ້ໃດໆເທິງແຜ່ນດິນໂລກ ນອກຈາກທຳລາຍຄົນທີ່ບໍ່ມີຕຣາປະທັບຂອງພຣະເຈົ້າທີ່ເທິງໜ້າຜາກຂອງພວກເຂົາເທົ່ານັ້ນ.
[5]ພວກມັນບໍ່ໄດ້ຮັບອະນຸຍາດໃຫ້ຂ້າຄົນເຫລົ່ານັ້ນ, ແຕ່ໃຫ້ທໍຣະມານພວກເຂົາເປັນເວລາຫ້າເດືອນ
ເປັນຄວາມເຈັບປວດທໍຣະມານເຫມືອນຖືກແມງງອດຕອດ.[6]ໃນວັນເຫລົ່ານັ້ນຄົນຈະຊອກຫາຄວາມຕາຍ, ແຕ່ພວກເຂົາຈະຊອກຫາບໍ່ພົບ.
ພວກເຂົາຈະປາຖນາຄວາມຕາຍຫລາຍທີ່ສຸດ ແຕ່ຄວາມຕາຍຈະປົບຫນີໄປຈາກພວກເຂົາ.
[7]ຝູງຕັກແຕນເປັນເຫມືອນຝູງມ້າທີ່ພ້ອມສຳລັບທຳສົງຄາມ. ເທິງຫົວຂອງພວກມັນມີບາງສິ່ງທີ່ເຫມືອນກັບມົງກຸດທອງຄຳ, ແລະ
ໃບຫນ້າຂອງພວກມັນກໍເຫມືອນກັບໃບຫນ້າຂອງມະນຸດ.[8]ພວກມັນມີເສັ້ນຜົມເຫມືອນກັບຜູ້ຍິງ, ແລະ
ແຂ້ວຂອງພວກມັນເຫມືອນກັບແຂ້ວຂອງສິງ.[9]ພວກມັນນຸ່ງເສື້ອເກາະເຫລັກ ສຽງປີກຂອງພວກມັນເຫມືອນສຽງຂອງລົດມ້າສົງຄາມ
ແລະຝູງມ້າທີ່ກຳລັງແລ່ນເຂົ້າສູ່ສົງຄາມ.
[10]ພວກມັນມີຫາງທີ່ໃຊ້ຕອດເຫມືອນແມງງອດ; ໃນຫາງຂອງພວກມັນມີອຳນາດທີ່ຈະທຳຮ້າຍຄົນໃຫ້ບາດເຈັບເປັນເວລາຫ້າເດືອນ.
[11]ພວກມັນມີຫົວຫນ້າຝູງທີ່ເປັນທູດຈາກຂຸມນາຮົກເລິກ. ຊື່ເປັນພາສາເຮັບເຣີຂອງທູດນັ້ນຄືອາບັດໂດນ ແລະ ຊື່ໃນພາສາກຣີກຄືອາໂປລີໂອນ.
[12]ວິບັດຢ່າງທຳອິດຜ່ານພົ້ນໄປແລ້ວ. ເບິ່ງແມ! ຈະຍັງຄົງມີວິບັດອີກສອງຢ່າງຈະເກີດຂຶ້ນພາຍຫນ້າ.
[13]ທູດສະຫວັນອົງທີຫົກເປົ່າແກ, ຂ້າພຣະເຈົ້າໄດ້ຍິນສຽງມາຈາກສີ່ແຈຂອງແທ່ນບູຊາຄຳທີ່ຕັ້ງຢູ່ຕໍ່ຫນ້າຂອງພຣະເຈົ້າ.
[14]ມີສຽງເວົ້າກັບທູດສະຫວັນອົງທີຫົກທີ່ເປົ່າແກນັ້ນວ່າ
"ຈົ່ງປ່ອຍທູດສະຫວັນທັງສີ່ທີ່ຖືກມັດໄວ້ທີ່ແມ່ນ້ຳເອີຟຣັດນັ້ນເສຍ"[15]ທູດສະຫວັນທັງສີ່ທີ່ຖືກຕຽມເອົາໄວ້ສຳລັບຊົ່ວໂມງນັ້ນ, ວັນນັ້ນ, ເດືອນນັ້ນ,
ແລະປີນັ້ນ ໄດ້ຖືກປ່ອຍມາເພື່ອຂ້າມວນມະນຸດຈຳນວນຫນຶ່ງສ່ວນສາມ.
[16]ຂ້າພຣະເຈົ້າໄດ້ຍິນເຖິງຈຳນວນພົນທະຫານທີ່ນັ່ງດ້ານຫລັງມ້າວ່າມີສອງຮ້ອຍລ້ານຄົນ
(200,000,000.)[17]ນີ້ຄືນິມິດທີ່ຂ້າພຣະເຈົ້າໄດ້ເຫັນກ່ຽວກັບເຫລົ່າມ້າ ແລະ ບັນດາຜູ້ຂີ່ມ້າເຫລົ່ານັ້ນ ເສື້ອເກາະຂອງພວກເຂົາເປັນສີແດງຄືໄຟ
ສີຟ້າເຂັ້ມ ແລະສີເຫລືອງຄືມາດ ຫົວຂອງມ້າເຫລົ່ານັ້ນດັ່ງຫົວສິງ, ມີໄຟ, ຄວັນ, ແລະມາດພຸ່ງອອກມາຈາກປາກຂອງພວກມັນ.
[18]ຈຳນວນຫນຶ່ງສ່ວນສາມຂອງມະນຸດຖືກຂ້າໂດຍພັຍພິບັດທັງສາມຢ່າງນີ້ຄື ໄຟ, ຄວັນ, ແລະ ມາດທີ່ອອກມາຈາກປາກຂອງພວກມັນ.
[19]ເພາະອຳນາດຂອງມ້າເຫລົ່ານັ້ນຢູ່ໃນປາກ ແລະ ຫາງຂອງພວກມັນ ຫາງຂອງພວກມັນເຫມືອນງູ
ພວກມັນມີຫົວຫລາຍຫົວເພື່ອໃຊ້ທຳຮ້າຍຄົນ.
[20]ສຳລັບມະນຸດທີ່ຍັງເຫລືອຢູ່, ບໍ່ໄດ້ຖືກຂ້າໂດຍພັຍພິບັດທັງສາມຢ່າງນີ້ ຄືພວກຄົນທີ່ບໍ່ໄດ້ກັບໃຈເສັຍໃຫມ່ຈາກການກະທຳຂອງຕົນ ຫລື
ບໍ່ຢຸດນະມັດສະການວິນຍານຊົ່ວກັບພວກຮູບເຄົາຣົບທີ່ ເຮັດມາຈາກຄຳ, ເງິນ, ກ້ອນຫີນ, ແລະໄມ້ ຄືສິ່ງຕ່າງໆທີ່ບໍ່ສາມາດເບິ່ງເຫັນ ໄດ້ຍິນ
ຫລືເດີນໄດ້.[21]ພວກຄົນທີ່ຍັງບໍ່ໄດ້ກັບໃຈຈາກການຂ້າຟັນກັນ ຈາກການໃຊ້ເວດມົນຄາຖາ, ຈາກການຜິດສິລະທັມທາງເພດ,
ຫລືຈາກການຂີ້ລັກຂອງພວກເຂົາ.

 generated on Tue Jun 17 19:01:42 2025

# 10

[1]ຈາກນັ້ນຂ້າພຣະເຈົ້າໄດ້ເຫັນທູດສະຫວັນທີ່ມີຣິດອຳນາດອີກຕົນຫນຶ່ງລົງມາຈາກສະຫວັນ ເຂົາມີເມກເປັນເສື້ອລ່າມ
ແລະມີສາຍຮຸ້ງຢູ່ເຫນືອຫົວຂອງເຂົາ ໃບຫນ້າຂອງເພິ່ນເຫມືອນດັ່ງຕາເວັນ
ແລະຂາເຫມືອນດັ່ງເຕົາໄຟ[2]ມືຂອງເພິ່ນຖືຫນັງສືມ້ວນນ້ອຍເຫລັ້ມຫນຶ່ງທີ່ຖືກເປີດອອກ ເພິ່ນວາງຕີນຂວາຢຽບລົງເທິງທະເລ
ແລະວາງຕີນຊ້າຍຢຽບເທິງແຜ່ນດິນໂລກ

[3]ແລ້ວເພິ່ນຈຶ່ງຮ້ອງສຽງດັງເຫມືອນກັບໂຕສິງແຜດສຽງ
ເມື່ອເຂົາຮ້ອງສຽງດັງກໍມີສຽງຟ້າຮ້ອງທັງເຈັດເວົ້າອອກມາ[4]ເມື່ອສຽງຟ້າຮ້ອງທັງເຈັດເວົ້າອອກມາ ຂ້າພຣະເຈົ້າກຳລັງຈະລົງມືຂຽນ
ແຕ່ຂ້າພຣະເຈົ້າໄດ້ຍິນສຽງຈາກສະຫວັນກ່າວວ່າ "ຈົ່ງເກັບໄວ້ເປັນຄວາມລັບກ່ຽວກັບສິ່ງທີ່ຟ້າຮ້ອງທັງເຈັດເວົ້ານັ້ນ ຈົ່ງຢ່າຂຽນບັນທຶກ"
[5]ຈາກນັ້ນທູດສະຫວັນອົງທີ່ຂ້າພຣະເຈົ້າໄດ້ເຫັນວ່າກຳລັງຢືນຢູ່ເທິງທະເລ
ແລະແຜ່ນດິນກໍຍົກມືຂວາຂອງເພິ່ນຂຶ້ນສູ່ສະຫວັນ[6]ແລະສາບານໂດຍອ້າງຜູ້ຫນຶ່ງເຊິ່ງເປັນຢູ່ນິຣັນດອນ ຜູ້ສ້າງຟ້າສະຫວັນ
ແລະທຸກສິ່ງທີ່ຢູ່ໃນນັ້ນ ຜູ້ສ້າງແຜ່ນດິນໂລກ ແລະທຸກສິ່ງທີ່ຢູ່ໃນນັ້ນ ຜູ້ສ້າງທະເລແລະທຸກສິ່ງທີ່ຢູ່ໃນນັ້ນ ແລະທູດສະຫວັນອົງນັ້ນໄດ້ກ່າວວ່າ
"ຈະບໍ່ມີການຊັກຊ້າອີກຕໍ່ໄປ[7]ເມື່ອເຖິງວັນນັ້ນທີ່ທູດສະຫວັນອົງທີເຈັດເປົ່າແກຂອງເຂົາ ຄວາມເລິກລັບຂອງພຣະເຈົ້າຈະຖືກເຮັດໃຫ້ສົມບູນ
ເຫມືອນຢ່າງທີ່ພຣະອົງໄດ້ປະກາດຕໍ່ບັນດາຜູ້ທຳນວາຍທີ່ເປັນຜູ້ຮັບໃຊ້ຂອງພຣະອົງນັ້ນ.
[8]ຂ້າພຣະເຈົ້າໄດ້ຍິນສຽງນັ້ນຈາກຟ້າສະຫວັນກ່າວກັບຂ້າພຣະເຈົ້າອີກວ່າ
"ຈົ່ງໄປແລະເປີດຫນັງສືມ້ວນທີ່ຢູ່ໃນມືຂອງທູດສະຫວັນອົງນັ້ນທີ່ກຳລັງຢືນຢູ່ເທິງທະເລແລະແຜ່ນດິນ."[9]ຂ້າພຣະເຈົ້າຈຶ່ງໄປຫາທູດສະຫວັນອົງນັ້ນແລະບອກໃຫ້ເພິ່ນ.
ເພິ່ນເວົ້າກັບຂ້າພຣະເຈົ້າວ່າ "ຈົ່ງຮັບຫນັງສືມ້ວນນີ້ແລະກິນເຂົ້າໄປ ມັນຈະຂົມຢູ່ທ້ອງຂອງທ່ານ,
ແຕ່ເມື່ອຢູ່ໃນປາກຂອງທ່ານມັນຈະມີລົດຊາດຫວານເຫມືອນນ້ຳເຜິ້ງ.
[10]ຂ້າພຣະເຈົ້າຮັບຫນັງສືມ້ວນນ້ອຍຈາກມືຂອງທູດສະຫວັນ ແລະກິນເຂົ້າໄປ ເມື່ອຢູ່ໃນປາກຂອງຂ້າພຣະເຈົ້າມັນຫວານ ເຫມືອນນ້ຳເຜິ້ງ
ແຕ່ເມື່ອຂ້າພຣະເຈົ້າກືນລົງ ມັນກັບກາຍເປັນຂົມຢູ່ໃນທ້ອງຂອງຂ້າພຣະເຈົ້າ[11]ຈາກນັ້ນມີຄົນບາງຄົນທີ່ເວົ້າກັບຂ້າພຣະເຈົ້າວ່າ
"ທ່ານຈະຕ້ອງປະກາດພຣະຄັມກ່ຽວກັບຜູ້ຄົນຕ່າງໆ ຊົນຊາດຕ່າງໆ ພາສາຕ່າງໆ ແລະກະສັດຈຳນວນຫລວງຫລາຍ."

 generated on Tue Jun 17 19:01:42 2025

11 [1]ຂ້າພຣະເຈົ້າໄດ້ຮັບໄມ້ອ້ອັນຫນຶ່ງເພື່ອໃຊ້ເປັນເຫມືອນໄມ້ວັດແທກ ຂ້າພຣະເຈົ້າໄດ້ຮັບຄຳບອກວ່າ
"ລຸກຂຶ້ນແລະວັດຂະຫນາດຂອງພຣະວິຫານຂອງພຣະເຈົ້າກັບແທ່ນບູຊາ
ແລະນັບຈຳນວນຄົນທີ່ມານະມັດສະການໃນວິຫານນັ້ນ[2]ແຕ່ບໍ່ຕ້ອງວັດແທກລານດ້ານນອກຂອງພຣະວິຫານ
ເພາະໄດ້ມອບສ່ວນນັ້ນໃຫ້ກັບຄົນທີ່ບໍ່ນັບຖືພຣະເຈົ້າແລ້ວ ພວກເຂົາຈະຢຽບຢ່ຳນະຄອນອັນບໍຣິສຸດເປັນເວລາສີ່ສິບສອງເດືອນ.

[3]ເຮົາຈະໃຫ້ສິດທິອຳນາດແກ່ພະຍານທັງສອງຂອງເຮົາທີ່ນຸ່ງເຄື່ອງໄວ້ທຸກເພື່ອປະກາດພຣະຄັມເປັນເວລາຫນຶ່ງພັນສອງຮ້ອຍຫົກສິບວັນ[4]ພະຍານເຫລົ່ານີ້ຄືຕົ້ນໝາກ
ແລະເຄື່ອງຮອງຕີນຕະກຽງຄຳສອງອັນທີ່ຕັ້ງຢູ່ຕໍ່ຫນ້າອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກ[5]ຖ້າຜູ້ໃດເລືອກທີ່ຈະທຳລາຍພວກເພິ່ນຈະມີໄຟອອກມາຈາກປາກຂອງພະ
ໃຜກໍຕາມທີ່ປາຖນາທີ່ຈະທຳລາຍພວກເພິ່ນຈະຕ້ອງຖືກຂ້າເຊັ່ນນັ້ນ
[6]ພະຍານເຫລົ່ານີ້ມີສິດທິອຳນາດໃນການປິດທ້ອງຟ້າເພື່ອບໍ່ໃຫ້ຝົນຕົກໃນຊ່ວງເວລາທີ່ພວກເພິ່ນປະກາດພຣະຄັມ
ພວກເພິ່ນມີອຳນາດທີ່ຈະປ່ຽນແປງນ້ຳໃຫ້ກາຍເປັນເລືອດໄດ້
ແລະໂຈມຕີແຜ່ນດິນໂລກດ້ວຍພັຍພິບັດທຸກຊະນິດຕາມທີ່ພວກເພິ່ນຕ້ອງການ[7]ເມື່ອພວກເພິ່ນໃກ້ເຮັດສຳເລັດໃນການເປັນພະຍານ
ກໍມີສັດຮ້າຍທີ່ຂຶ້ນມາຈາກຂຸມນາຣົກເລິກທີ່ຈະທຳສົງຄາມຕໍ່ສູ້ກັບພວກເພິ່ນ ສັດຮ້າຍນັ້ນຈະເອົາຊະນະ ແລະຂ້າພວກເຂົາເສຍ.
[8]ສົບຂອງທ່ານທັງສອງຈະຖືກຖິ້ມໄວ້ກາງທາງຂອງນະຄອນໃຫຍ່ນັ້ນ (ອັນເປັນສັນຍາລັກຂອງນະຄອນນີ້ຊື່ວ່າ ເມືອງໂຊໂດມແລະເມືອງອີຢິບ)
ເປັນທີ່ຊຶ່ງອົງພຣະຜູ້ເປັນເຈົ້າຖືກຄຶງໄວ້ທີ່ໄມ້ກາງແຂນ[9]ຈະມີບາງຄົນຈາກຜູ້ຄົນທັງຫມົດ ຈາກຄົນທຸກເຜົ່າ ຈາກທຸກພາສາ ແລະຈາກທຸກຊົນຊາດ
ເຝົ້າເບິ່ງຊາກສົບຂອງພວກເພິ່ນເປັນເວລາສາມວັນເຄິ່ງ ແລະຈະບໍ່ຍອມໃຫ້ສົບຂອງພວກເພິ່ນຖືກຝັງໄວ້ໃນອຸໂມງ.
[10]ຄົນເຫລົ່ານັ້ນທີ່ອາໄສຢູ່ເທິງແຜ່ນດິນໂລກຈະຊື່ນຊົມຍິນດີດ້ວຍເລື່ອງພວກເພິ່ນ ແລະສະເຫລີມສະຫລອງ
ພວກເຂົາສົ່ງຂອງຂວັນໃຫ້ແກ່ກັນເພາະວ່າຜູ້ປະກາດພຣະຄັມທັງສອງເຫລົ່ານີ້ໄດ້ທໍຣະມານບັນດາຄົນເຫລົ່ານັ້ນທີ່ອາໄສຢູ່ເທິງແຜ່ນດິນໂລກ[11]ແຕ່ຫລັງຈາກກາຍເວລ
ລົມຫາຍໃຈແຫ່ງຊີວິດຈາກພຣະເຈົ້າຈະເຂົ້າໄປພາຍໃນຊາກສົບຂອງພວກເພິ່ນ ແລະພວກເພິ່ນຈະຢືນຂຶ້ນ
ຄວາມຢ້ານອັນຍິ່ງໃຫຍ່ຈະບັງເກີດຂຶ້ນກັບພວກຄົນທີ່ໄດ້ເບິ່ງເຫັນພວກເພິ່ນ[12]ຈາກນັ້ນຜູ້ປະກາດພຣະທັມທັງສອງໄດ້ຍິນສຽງດັງຈາກຟ້າສະຫວັນເວົ້າກັບພວກເພິ່ນວ່
"ຈົ່ງຂຶ້ນມາທີ່ນີ້" ແລ້ວພວກເພິ່ນຈະຂຶ້ນໄປໃນສະຫວັນທ່າມກາງຫມູ່ເມກໃນຂະນະທີ່ພວກສັດຕຣູກໍຈ້ອງເບິ່ງຢູ່ນັ້ນ.
[13]ໃນຊົ່ວໂມງນັ້ນເອງຈະເກີດແຜ່ນດິນໄຫວໃຫຍ່ ແລະຫນຶ່ງສ່ວນສິບຂອງນະຄອນຈະຍຸບຫາຍໄປ
ຄົນເຈັດພັນຄົນຈະຖືກຂ້າເນື່ອງຈາກແຜ່ນດິນໄຫວນັ້ນ ແລະບັນດາຄົນທີ່ລອດຊີວິດຈະຕົກໃຈຢ້ານ
ແລະຖວາຍກຽດພຣະເຈົ້າແຫ່ງຟ້າສະຫວັນ[14]ວິບັດຢ່າງທີ່ສອງຜ່ານໄປ ເບິ່ງແມ ວິບັດຢ່າງທີ່ສາມກຳລັງຈະມາຢ່າງໄວວາ.
[15]ແລ້ວທູດສະຫວັນອົງທີ່ເຈັດກໍເປົ່າແກຂອງຕົນ ແລະມີສຽງອັນດັງໃນຟ້າສະຫວັນກ່າວວ່າ
"ອານາຈັກແຫ່ງໂລກນີ້ໄດ້ກາຍມາເປັນອານາຈັກຂອງອົງພຣະຜູ້ເປັນເຈົ້າ ແລະຂອງພຣະຄຣິດເຈົ້າຂອງພວກເຮົາ
ພຣະອົງຈະຄອບຄອງຕະຫລອດໄປເປັນນິດ.
[16]ແລ້ວບັນດາຜູ້ປົກຄອງທັງຊາວສີ່ທ່ານທີ່ກຳລັງນັ່ງຢູ່ເທິງບັນລັງຂອງພວກຕົນໃນທ່າມກາງການສະຖິດຢູ່ຂອງພຣະເຈົ້າ ກໍຂາບລົງພື້ນດິນ
ພວກເພິ່ນນະມັດສະການພຣະເຈົ້າ[17]ພວກເພິ່ນເວົ້າວ່າ "ຂ້າຂອບພຣະຄຸນພຣະອົງ ອົງພຣະຜູ້ເປັນເຈົ້າຊົງຣິດ ຜູ້ເປັນຢູ່ໃນວັນນີ້ ແລະໃນອະດີດ
ເພາະພຣະອົງໄດ້ຮັບສິດທິອຳນາດອັນຍິ່ງໃຫຍ່ ແລະໄດ້ເລີ່ມຕົ້ນຄອບຄອງແລ້ວ.
[18]ປະຊາຊາດຕ່າງໆຈະຄຽດແຄ້ນ ແຕ່ຄວາມໂກດຮ້າຍຂອງພຣະເຈົ້າໄດ້ມາເຖິງແລ້ວ ເວລາທີ່ຄົນຕາຍຈະໄດ້ຮັບການພິພາກສາກໍມາເຖິງແລ້ວ
ແລະເປັນເວລາທີ່ພຣະອົງຈະປຣະທານລາງວັນໃຫ້ແກ່ຜູ້ປະກາດພຣະຄັມທີ່ເປັນຜູ້ຮັບໃຊ້ຂອງພຣະອົງ ແກ່ຄົນທັງຫລາຍທີ່ເປັນຜູ້ເຊື່ອ
ແລະແກ່ຄົນທັງຫລາຍທີ່ຢຳເກງພຣະນາມຂອງພຣະອົງທັງຄົນທີ່ບໍ່ສຳຄັນ ແລະຄົນທີ່ຍິ່ງໃຫຍ່
ແລະເວລາກໍມາເຖິງເພື່ອພຣະອົງຈະທຳລາຍຄົນເຫລົ່ານັ້ນທີ່ກຳລັງທຳລາຍແຜ່ນດິນໂລກຢູ່.
[19]ຈາກນັ້ນພຣະວິຫານຂອງພຣະເຈົ້າກໍຖືກເປີດອອກໃນສະຫວັນ ແລະເບິ່ງເປັນຫີບແຫ່ງພັນທະສັນຍາຂອງພຣະອົງທີ່ຕັ້ງໃນພຣະວິຫານ
ຟ້າກໍແມບ ມີສຽງດັງ ສຽງຟ້າຮ້ອງກໍກຶກກ້ອງ ແຜ່ນດິນໄຫວ ແລະມີພາຍຸຫມາກເຫັບຕົກຢ່າງຫລວງຫລາຍ.

# 12

[1]ມີຫມາຍສຳຄັນອັນໃຫຍ່ປາກົດຂຶ້ນໃນສະຫວັນ ຄືມີຜູ້ຍິງຄົນຫນຶ່ງທີ່ມີດວງອາທິດປົກຄຸມໂຕເປັນເສື້ອຜ້າ
ແລະດວງເດືອນຮອງຕີນຂອງນາງ ແລະມີດາວທັງສິບສອງດວງເປັນມົງກຸດສວມຢູ່ເທິງຫົວ[2]ຍິງນັ້ນຖືພາ,
ແລະລາວໄດ້ຮ້ອງໄຫ້ຄວນຄາງອອກມາ ກຳລັງຈະເກີດລູກ.

[3]ຈາກນັ້ນຈຶ່ງມີອີກຫມາຍສຳຄັນຫນຶ່ງເກີດຂຶ້ນໃນສະຫວັນ ເບິ່ງແມ ມີພະຍານາກໃຫຍ່ຕົວຫນຶ່ງທີ່ມີເຈັດຫົວ ມີສິບເຂົາ
ແລະມີມົງກຸດເຈັດອັນຢູ່ເທິງແຕ່ລະຫົວຂອງມັນ[4]ຫາງຂອງມັນກວາດເອົາດວງດາວຫນຶ່ງສ່ວນສາມຂອງຟ້າສະຫວັນ
ແລະຖິ້ມດາວເລົ່ານັ້ນເທິງແຜ່ນດິນໂລກ ພະຍານາກໂຕນັ້ນຢືນຢູ່ຕໍ່ຫນ້າຜູ້ຍິງທີ່ກຳລັງຈະເກີດລູກ ເພື່ອວ່າເມື່ອຜູ້ຍິງຄົນນັ້ນເກີດລູກອອກມາ
ມັນຈະທຳຮ້າຍລູກຂອງນາງ.
[5]ນາງເກີດລູກຊາຍ ເປັນເດັກນ້ອຍຜູ້ຊາຍທີ່ຈະປົກຄອງທຸກຊົນຊາດດ້ວຍໄມ້ຄ້ອນເຫລັກ ເດັກຄົນນັ້ນຖືກຮັບອອກມາຫາພຣະເຈົ້າ
ແລະນຳໄປທີ່ບັນລັງຂອງພຣະອົງ[6]ສ່ວນຍິງນັ້ນຫນີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານຊຶ່ງພຣະເຈົ້າໄດ້ຈັດຕຽມສະຖານທີ່ເອົາໄວ້ທີ່ນັ້ນເພື່ອນາງຈະໄດ້ຮັບການດູແລເປັນເ
[7]ບັດນີ້ມີສົງຄາມເກີດຂຶ້ນໃນຟ້າສະຫວັນ ມີຄາເອນແລະເຫລົ່າທູດສະຫວັນຂອງຕົນຕ່າງກໍຕໍ່ສູ້ກັບພະຍານາກນັ້ນ
ພະຍານາກແລະເຫລົ່າສະຫມຸນຂອງມັນກໍຕໍ່ສູ້ຄືນ[8]ແຕ່ພະຍານາກບໍ່ແຂງແຮງພໍທີ່ຈະຮົບຊະນະໄດ້
ບໍ່ມີທີ່ຫວ່າງໃນສະຫວັນສຳລັບມັນແລະເຫລົ່າສະຫມຸນຂອງມັນ[9]ດັ່ງນັ້ນພະຍານາກໃຫຍ່ ຄືງູດຶກດຳບັນທີ່ມີຊື່ວ່າມານຮ້າຍ ຫລືຊາຕານ
ຜູ້ທີ່ຫລອກລວງໂລກທັງໂລກນີ້ ຈຶ່ງຖືກຖິ້ມລົງມາເທິງແຜ່ນດິນໂລກພ້ອມກັບເຫລົ່າສະຫມຸນຂອງມັນທັງໝົດ.
[10]ແລ້ວຂ້າພຣະເຈົ້າໄດ້ຍິນສຽງອັນດັງໃນສະຫວັນວ່າ: ບັດນີ້ຄວາມລອດພົ້ນ, ຣິດອຳນາດ, ຣາຊອານາຈັກຂອງພຣະເຈົ້າ
ແລະສິດທິອຳນາດຂອງພຣະຄຣິດໄດ້ມາເຖິງແລ້ວ. ເພາະຜູ້ກ່າວໂທດພີ່ນ້ອງຂອງເຮົາໄດ້ຖືກຖິ້ມລົງໄປແລ້ວ
ຄືຜູ້ກ່າວໂທດພວກເຂົາຕໍ່ຫນ້າພຣະເຈົ້າທັງກາງເວັນແລະກາງຄືນ.
[11]ພວກເຂົາຊະນະມັນໄດ້ໂດຍພຣະໂລຫິດຂອງພຣະເມສານ້ອຍ ແລະໂດຍຖ້ອຍຄຳແຫ່ງການເປັນພະຍານຂອງພວກເຂົາ
ເພາະພວກເຂົາບໍ່ໄດ້ຮັກຊີວິດຂອງຕົນເອງແຕ່ຍອມຕາຍໄດ້.[12]ດ້ວຍເຫດນີ້, ເຫລົ່າຟ້າສະຫວັນ, ຕະຫລອດຈົນທັງສິ້ນທີ່ອາໄສຢູ່ໃນນັ້ນ,
ຈົ່ງຊື່ນຊົມຍິນດີເຖີ້ນ ແຕ່ວິບັດຈົ່ງເກີດແກ່ແຜ່ນດິນໂລກ, ແລະທະເລເພາະມານຮ້າຍໄດ້ລົງໄປຫາພວກເຈົ້າແລ້ວ.
ມັນເຕັມໄປດ້ວຍຄວາມຄຽດແຄ້ນໂມໂຫ ເພາະມັນຮູ້ວ່າເວລາຂອງມັນເຫລືອຫນ້ອຍເຕັມທີ.
[13]ເມື່ອພະຍານາກນັ້ນຮູ້ວ່າມັນໄດ້ຖືກຖິ້ມລົງມາເທິງແຜ່ນດິນໂລກ, ມັນຈຶ່ງຕາມຫາຜູ້ຍິງຄົນນັ້ນທີ່ເກີດລູກຊາຍນັ້ນ.
[14]ແຕ່ຜູ້ຍິງຄົນນັ້ນໄດ້ຮັບປີກຂອງນົກອິນຊີໃຫຍ່ສອງປີກ,
ດັ່ງນັ້ນນາງຈຶ່ງສາມາດຫນີໄປຍັງສະຖານທີ່ໆໄດ້ຈັດຕຽມເອົາໄວ້ສຳລັບນາງໃນຖິ່ນແຫ້ງແລ້ງກັນດານໃນບ່ອນນັ້ນນາງຈະໄດ້ຮັບການດູແລເອົາໃຈໃສ່ໃຫ້ພົ້ນໄພຈາກງູ
ສອງວາລະ ແລະອີກເຄິ່ງວາລະ.
[15]ງູໃຫຍ່ນັ້ນໄດ້ເປົ່ານ້ຳອອກມາຈາກປາກຂອງມັນເຫມືອນກັບແມ່ນ້ຳສາຍຫນຶ່ງ, ເພື່ອຈະເຮັດໃຫ້ເກີດນ້ຳຖ້ວມທີ່ພັດພາເອົາຍິງຄົນນັ້ນໄປ.
[16]ແຜ່ນດິນໂລກໄດ້ເປີດປາກອອກ ແລະສູບເອົາແມ່ນ້ຳທີ່ພະຍານາກໄດ້ເປົ່າອອກມາຈາກປາກຂອງມັນລົງໄປເສຍ.
[17]ພະຍານາກນັ້ນຈຶ່ງຄຽດແຄ້ນຜູ້ຍິງຄົນນັ້ນຫລາຍ, ມັນຈຶ່ງໄປທຳສົງຄາມຕໍ່ສູ້ກັບເຊື້ອສາຍທີ່ເຫລືອທັງຫມົດຂອງນາງ,
ຄືບັນດາຄົນທີ່ເຊື່ອຟັງຄຳບັນຊາຂອງພຣະເຈົ້າ, ແລະຍຶດຫມັ້ນໃນຄຳພະຍານຂອງພວກເຂົາກ່ຽວກັບພຣະເຢຊູເຈົ້າ.
[18]ຈາກນັ້ນພະຍານາກນັ້ນຈຶ່ງຢືນຂຶ້ນເທິງຫາດຊາຍແຄມທະເລ.


generated on Tue Jun 17 19:01:42 2025

13 [1]ແລ້ວຂ້າພຣະເຈົ້າເຫັນສັດຮ້າຍໂຕຫນຶ່ງຂຶ້ນມາຈາກທະເລ. ມັນມີເຂົາສິບເຂົາ ແລະຫົວເຈັດຫົວ.
ເທິງເຂົາທັງສິບຂອງມັນມີມົງກຸດເທິງຫົວຂອງແຕ່ລະຫົວຂອງມັນມີຊື່ເປັນຄຳຫມິ່ນປະຫມາດພຣະເຈົ້າ.
[2]ສັດຮ້າຍທີ່ຂ້າພຣະເຈົ້າໄດ້ເຫັນນີ້ມີລັກສະນະຄືກັບເສືອດາວໂຕຫນຶ່ງ, ຕີນຂອງມັນເຫມືອນຕີນຂອງຫມີ, ແລະປາກຂອງມັນເຫມືອນສິງ,
ພະຍານາກນັ້ນໃຫ້ອຳນາດບັນລັງແລະສິດທິອຳນາດອັນຍິ່ງໃຫຍ່ແກ່ມັນເພື່ອຈະຄອບຄອງ.

[3]ຫົວຫນຶ່ງຂອງສັດຮ້າຍນີ້ມີຮອຍບາດແຜທີ່ເຫມືອນເຄີຍຖືກຂ້າເຖິງຕາຍແລ້ວ, ແຕ່ກັບໄດ້ຮັບການຮັກສາໃຫ້ຫາຍດີ,
ແລະໂລກທັງໂລກຕ່າງກໍແຕກຕື່ນໃນຂະນະທີ່ພວກເຂົາຕິດຕາມສັດຮ້າຍນັ້ນ.[4]ພວກເຂົາຍັງນະມັດສະການພະຍານາກນັ້ນ, ແລະ
ເພາະພະຍານາກມອບສິດທິອຳນາດຂອງມັນໃຫ້ແກ່ສັດຮ້າຍໂຕນັ້ນ ພວກເຂົາຈຶ່ງນະມັດສະການສັດຮ້າຍໂຕນັ້ນ ແລະເວົ້າກັນບໍ່ຢຸດວ່າ,
"ໃຜຈະເປັນເຫມືອນສັດຮ້າຍນີ້?" ແລະ "ໃຜຈະຕໍ່ສູ້ມັນໄດ້."
[5]ພຣະເຈົ້າຊົງອະນຸຍາດໃຫ້ສັດນັ້ນມີນັ້ນປາກທີ່ກ່າວໂອ້ອວດ ແລະຫມິ່ນປະຫມາດພຣະເຈົ້າ.
ແລະໃຫ້ມີສິດທິອຳນາດເຮັດຢ່າງນັ້ນສີ່ສິບສອງເດືອນ.[6]ດັ່ງນັ້ນສັດຮ້າຍນັ້ນຈຶ່ງເປີດປາກຂອງມັນກ່າວຕໍ່ຕ້ານພຣະເຈົ້າ:
ຫມິ່ນປະມາດພຣະນາມຂອງພຣະອົງ, ຫມິ່ນປະຫມາດທີ່ບັນລັງ ແລະບັນດາຜູ້ທີ່ຢູ່ເທິງສະຫວັນທັງຫມົດ.
[7]ສັດຮ້າຍນັ້ນໄດ້ຮັບອະນຸຍາດໃຫ້ເຮັດສົງຄາມກັບບັນດາຜູ້ເຊື່ອ ແລະເອົາຊະນະພວກເຂົາໄດ້. ມັນຍັງໄດ້ຮັບສິດທິອຳນາດເຫນືອຄົນທຸກເຜົ່າ
ທຸກຄົນ ທຸກພາສາ ແລະທຸກຊົນຊາດ.[8]ທຸກຄົນທີ່ອາໄສຢູ່ໃນໂລກນີ້ຈະນະມັດສະການມັນ,
ຄືທຸກຄົນທີ່ຊື່ຂອງເຂົາບໍ່ຖືກຈົດບັນທຶກເອົາໄວ້ໃນຫນັງສືແຫ່ງຊີວິດຂອງພຣະເມສານ້ອຍຜູ້ຖືກຂ້ານັບຕັ້ງແຕ່ຊົງສ້າງໂລກ.
[9]ໃຜມີຫູຟັງ ຈົ່ງຟັງເອົາເທີ້ນ, ຖ້າໃຜຖືກຄາດຫມາຍໄວ້ໃຫ້ເປັນຊະເລີຍ ເຂົາກໍຈະຕ້ອງເປັນຊະເລີຍ.
[10]ຖ້າໃຜຖືກຄາດຫມາຍໄວ້ໃຫ້ຖືກຂ້າດ້ວຍດາບ ເຂົາກໍຈະຖືກຂ້າດ້ວຍດາບ ນີ້ຄືການຊົງເອີ້ນເພື່ອໃຫ້ມີຄວາມອົດທົນຍືນຢັດ
ແລະມີຄວາມເຊື່ອສຳລັບຜູ້ທີ່ບໍຣິສຸດທັງຫລາຍ.
[11]ຈາກນັ້ນຂ້າພຣະເຈົ້າເຫັນສັດຮ້າຍອີກໂຕຫນຶ່ງຂຶ້ນມາຈາກແຜ່ນດິນໂລກ. ມັນມີສອງເຂົາເຫມືອນແກະໂຕຫນຶ່ງ ແລະມັນເວົ້າຄືກັບພະຍານາກ.
[12]ໃນການປາກົດຕົວຂອງມັນນັ້ນ ມັນໃຊ້ສິດທິອຳນາດທັງຫມົດຂອງສັດຮ້າຍໂຕທຳອິດ,
ມັນເຮັດໃຫ້ແຜ່ນດິນໂລກແລະທຸກສິ່ງທີ່ຢູ່ໃນນັ້ນນະມັດສະການສັດຮ້າຍໂຕທຳອິດທີ່ມີບາດແຜຂອງມັນ ແຕ່ໄດ້ຮັບການຮັກສາໃຫ້ຫາຍແລ້ວ.
[13]ມັນເຮັດການອັດສະຈັນອັນຍິ່ງໃຫຍ່. ແມ່ນແຕ່ເຮັດໃຫ້ໄຟຕົກລົງມາຈາກສະຫວັນເທິງແຜ່ນດິນໂລກຕໍ່ຫນ້າຕໍ່ຕາຄົນທັງຫລາຍ.
[14]ມັນໄດ້ຮັບອະນຸຍາດໃຫ້ເຮັດຫມາຍສຳຄັນຕ່າງໆໄດ້ ມັນຫລອກຫລວງຄົນທີ່ຢູ່ໃນໂລກ.
ມັນບອກໃຫ້ພວກເຂົາສ້າງຮູບປັ້ນຂອງສັດຮ້າຍທີ່ມີບາດແຜຈາກດາບ ແຕ່ຍັງມີຊີວິດຢູ່ເພື່ອຍົກຍ້ອງໃຫ້ກຽດ.
[15]ມັນໄດ້ຮັບອະນຸຍາດເພື່ອໃຫ້ລົມຫາຍໃຈແກ່ຮູບປັ້ນສັດຮ້າຍນັ້ນ ເພື່ອມັນຈະສາມາດເວົ້າໄດ້
ແລະໃຜປະຕິເສດທີ່ຈະນະມັດສະການສັດຮ້າຍນັ້ນຈະຕ້ອງຖືກຂ້າຕາຍ.[16]ບໍ່ວ່າຈະເປັນຄົນສຳຄັນ, ຫລືບໍ່ສຳຄັນ, ຄົນຮັ່ງມີຫລືຄົນຈົນ,
ບໍ່ວ່າຈະເປັນອິສຣະຫລືທາດ, ໃຫ້ເຮັດສັນຍາລັກທີ່ມືຂວາ ຫລືເທິງຫນ້າຜາກ.
[17]ຜູ້ຄົນບໍ່ສາມາດຊື້ຂາຍໃດໆໄດ້ຖ້າຫາກບໍ່ມີສັນຍາລັກຂອງສັດຮ້າຍນີ້ທີ່ໃຫ້ຕົວເລກແທນຊື່ຂອງມັນ.
[18]ເລື່ອງນີ້ຕ້ອງໃຊ້ສະຕິປັນຍາ ຫາກຜູ້ໃດມີຄວາມເຂົ້າໃຈ ກໍໃຫ້ເຂົາຄິດຄາດະເນຕົວເລກຂອງສັດຮ້າຍນັ້ນ. ເພາະມັນເປັນເລກແທນບຸກຄົນຫນຶ່ງ
ເລກຂອງມັນຄືຫົກຮ້ອຍຫົກສິບຫົກ.

# 14

[1]ຂ້າພຣະເຈົ້າເບິ່ງແລະເຫັນພຣະເມສານ້ອຍກຳລັງຢືນຢູ່ເທິງພູເຂົາຊີໂອນ. ມີແສນສີ່ຫມື່ນສີ່ພັນຄົນ
ຢູ່ຮ່ວມກັບພຣະອົງຄືບັນດາຄົນທີ່ເທິງຫນ້າຜາກຂອງພວກເຂົາຈາລຶກພຣະນາມຂອງພຣະອົງ ແລະພຣະນາມຂອງພຣະບິດາຂອງພຣະອົງ.
[2]ຂ້າພຣະເຈົ້າໄດ້ຍິນສຽງຈາກສະຫວັນດັງຂຶ້ນເຫມືອນສຽງຄື້ນຢ່າງຫລວງຫລາຍ ແລະສຽງຟ້າຮ້ອງສະຫນັ່ນ.
ສຽງທີ່ຂ້າພຣະເຈົ້າໄດ້ຍິນນັ້ນເປັນເຫມືອນສຽງພິນທີ່ບັນດານັກດີດພິນກຳລັງບັນເລງ.

[3]ພວກເຂົາຮ້ອງເພງບົດໃຫມ່ຕໍ່ຫນ້າພຣາຊບັນລັງ ຕໍ່ຫນ້າສິ່ງທີ່ມີຊີວິດທັງສີ່ ແລະຕໍ່ຫນ້າບັນດາຜູ້ອາວຸໂສ
ບໍ່ມີໃຜສາມາດຝຶກຮ້ອງເພງນັ້ນໄດ້ນອກຈາກຄົນແສນສີ່ຫມື່ນສີ່ພັນຄົນນັ້ນ ຄົນເຫລົ່ານນີ້ຊົງໄຖ່ໄວ້ແລ້ວຈາກແຜ່ນດິນໂລກ.
[4]ຄົນເຫລົ່ານີ້ຄືບັນດາຄົນທີ່ບໍ່ໄດ້ເຮັດໃຫ້ຕົນເອງເປັນມົນທິນເພາະຜູ້ຍິງ, ພວກເຂົາຮັກສາຕົວເອງໃຫ້ມີຄວາມບໍລິສຸດທາງເພດ
ຄົນເຫລົ່ານີ້ຄືຄົນທີ່ຕິດຕາມພຣະເມສານ້ອຍໄປໃນທຸກບ່ອນທີ່ພຣະອົງໄປ,
ຄົນເຫລົ່ານີ້ຖືກນຳອອກມາຈາກມວນມະນຸດເປັນຜົນທຳອິດທີ່ມອບຖວາຍໃຫ້ກັບພຣະເຈົ້າແລະກັບພຣະເມສານ້ອຍ.
[5]ບໍ່ມີຄຳເວົ້າຂີ້ຕົວະໃດໆອອກມາຈາກປາກຂອງພວກເຂົາ; ພວກເຂົາບໍ່ມີທີ່ຕິເລີຍ.
[6]ຂ້າພຣະເຈົ້າໄດ້ເຫັນທູດສະຫວັນອີກອົງຫນຶ່ງ, ບິນມາກາງອາກາດ
ເຂົາມີຖ້ອຍຄຳອັນຕະຫລອດໄປເປັນນິດແຫ່ງຂ່າວປະເສີດເພື່ອປະກາດແກ່ບັນດາຄົນທີ່ຢູ່ເທິງແຜ່ນດິນໂລກຄື ທຸກຊົນຊາດ ທຸກເຜົ່າ ທຸກພາສາ
ແລະທຸກຄົນ.[7]ເຂົາຮ້ອງດ້ວຍສຽງດັງວ່າ "ຈົ່ງຢຳເກງພຣະເຈົ້າ ແລະຖວາຍກຽດແກ່ພຣະອົງ. ເພາະຊົ່ວໂມງແຫ່ງການພິພາກສາໄດ້ມາເຖິງແລ້ວ
ຈົ່ງນະມັດສະການພຣະອົງ ຜູ້ດຽວທີ່ສ້າງຟ້າສະຫວັນ, ແຜ່ນດິນໂລກ ທະເລ, ແລະນ້ຳພຸທັງຫລາຍ."
[8]ແລ້ວທູດສະຫວັນອີກອົງຫນຶ່ງຄື ທູດສະຫວັນອົງທີສອງຕາມມາ ແລະກ່າວວ່າ "ຫລົ້ມຈົມແລ້ວ ບາບີໂລນມະຫານະຄອນຫລົ້ມຈົມແລ້ວ,
ຜູ້ທີ່ຊັກຈູງທຸກຊົນຊາດໃຫ້ດື່ມເຫລົ້າອະງຸ່ນແຫ່ງຣາຄະຕັນຫາຂອງນາງ."
[9]ທູດສະຫວັນອີກອົງຫນຶ່ງຄື ອົງທີສາມທີ່ຕາມພວກເຂົາມາໄດ້ເວົ້າດ້ວຍສຽງດັງວ່າ, "ຜູ້ໃດທີ່ນະມັດສະການສັດຮ້າຍ ແລະຮູບປັ້ນຂອງມັນ
ແລະໄດ້ຮັບສັນຍາລັກທີ່ຫນ້າຜາກຫລືມືຂອງເຂົາ.[10]ເຂົາຈະໄດ້ດື່ມເຫລົ້າອະງຸ່ນແຫ່ງຄວາມໂກດຮ້າຍຂອງພຣະເຈົ້າດ້ວຍເຊັ່ນກັນ,
ເຫລົ້າອະງຸ່ນທີ່ຖືກເຫລົ່ງໃນຖ້ວຍແຫ່ງຄວາມໂກດຮ້າຍໂດຍບໍ່ເຈືອປົນສິ່ງໃດ.
ຄົນທີ່ດື່ມຈະທົນທຸກທໍຣະມານດ້ວຍໄຟມາດຕໍ່ຫນ້າທູດສະຫວັນບໍຣິສຸດຂອງພຣະເຈົ້າ ແລະຕໍ່ພຣະພັກພຣະເມສານ້ອຍ."
[11]ຄວັນຈາກການທໍຣະມານຂອງພວກເຂົາຈະລອຍຂຶ້ນຕະຫລອດໄປເປັນນິດ, ແລະພວກເຂົາຈະບໍ່ໄດ້ຢຸດພັກ ບໍ່ວ່າຈະກາງເວັນຫລືກາງຄືນ
ພວກເຂົາຄືຄົນທີ່ນະມັດສະການສັດຮ້າຍ ກັບຮູບປັ້ນຂອງມັນ, ແລະທຸກຄົນທີ່ໄດ້ຮັບສັນຍາລັກທີ່ເປັນຊື່ຂອງມັນ.
[12]ຜູ້ທີ່ເຊື່ອຟັງຄຳບັນຊາຂອງພຣະເຈົ້າ ແລະຜູ້ທີ່ມີຄວາມເຊື່ອຝ່າຍພຣະເຢຊູເຈົ້າກໍຕ້ອງໃຊ້ຄວາມພຽນອົດທົນ."
[13]ຂ້າພຣະເຈົ້າໄດ້ຍິນສຽງຈາກຟ້າສະຫວັນກ່າວວ່າ, "ຈົ່ງຂຽນບັນທຶກສິ່ງນີ້ ຄວາມສຸກເປັນຂອງຄົນທີ່ຕາຍໃນອົງພຣະຜູ້ເປັນເຈົ້າ."
ພຣະວິນຍານກ່າວວ່າ "ແມ່ນແລ້ວ, ເພື່ອພວກເຂົາຈະໄດ້ຢຸດພັກຈາກການງານອັນຫນັກ,
ແລະການກະທຳຂອງພວກເຂົາຈະຕິດຕາມພວກເຂົາໄປ."
[14]ຂ້າພຣະເຈົ້າເບິ່ງ ແລະມີເມກສີຂາວກ້ອນຫນຶ່ງ. ຜູ້ທີ່ນັ່ງຢູ່ເທິງເມກນັ້ນມີລັກສະນະເຫມືອນບຸດມະນຸດ. ພຣະອົງສວມມົງກຸດຄຳເທິງຫົວ
ແລະໃນມືຊົງຖືກ່ຽວທີ່ຄົມຫລາຍ.[15]ຈາກນັ້ນຈຶ່ງມີທູດສະຫວັນອີກອົງຫນຶ່ງອອກມາຈາກພຣະວິຫານ
ແລະຮຽກຮ້ອງຜູ້ນັ່ງຢູ່ເທິງເມກດ້ວຍສຽງດັງວ່າ: "ໃຊ້ກ່ຽວຂອງທ່ານແລະເລີ່ມຕົ້ນເກັບກ່ຽວ ເພາະເຖິງເວລາແຫ່ງການເກັບກ່ຽວແລ້ວ,
ເນື່ອງຈາກຜົນທີ່ຈະເກັບກ່ຽວເທິງແຜ່ນດິນໂລກກໍສຸກງອມແລ້ວ."[16]ແລ້ວຜູ້ທີ່ນັ່ງຢູ່ເທິງເມກຈຶ່ງແກວ່ງກ່ຽວຂອງພຣະອົງລົງແຜ່ນດິນໂລກ,
ແລ້ວແຜ່ນດິນໂລກກໍໄດ້ຮັບການເກັບກ່ຽວ.
[17]ມີທູດສະຫວັນອົງຫນຶ່ງອອກມາຈາກພຣະວິຫານໃນສະຫວັນ; ເຂົາມີກ່ຽວທີ່ຄົມຫລາຍດ້ວຍເຊັ່ນກັນ.[18]ຍັງມີທູດສະຫວັນອີກອົງຫນຶ່ງ,
ຜູ້ມີສິດທິດອຳນາດເຫນືອໄຟ. ໄດ້ອອກມາຈາກແທ່ນເຜົາເຄື່ອງຫອມບູຊາ. ເຂົາຮ້ອງດ້ວຍສຽງດັງຕໍ່ຜູ້ນັ້ນທີ່ກ່ຽວວ່າ
"ໃຊ້ກ່ຽວທີ່ຄົມຫລາຍຂອງທ່ານເພື່ອເກັບກ່ຽວພວງອະງຸ່ນທັງຫລາຍຈາກເຄືອອະງຸ່ນທີ່ເທິງແຜ່ນດິນໂລກ ເພາະຫມາກອະງຸ່ນກໍສຸກງອມແລ້ວ."
[19]ທູດສະຫວັນອົງນັ້ນຈຶ່ງແກວ່ງກ່ຽວລົງເທິງແຜ່ນດິນໂລກ ແລະເກັບກ່ຽວຫມາກອະງຸ່ນຈາກແຜ່ນດິນໂລກ.
ເຂົາໂຍນຫມາກອະງຸ່ນເຫລົ່ານັ້ນລົງໄປໃນອ່າງບີບອະງຸ່ນຂະໜາດໃຫຍ່ຊຶ່ງເປັນອ່າງແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ.
[20]ອ່າງບີບອະງຸ່ນນັ້ນຖືກບີບທີ່ນອກເມືອງ
ມີເລືອດໄຫລອອກມາຈາກອ່າງນັ້ນເລິກເກືອບເຖິງສອງແມັດແລະໄຫລຍາວເປັນສາຍນ້ຳປະມານສາມຮ້ອຍກິໂລແມັດ.


generated on Tue Jun 17 19:01:42 2025

15 [1]ແລ້ວຂ້າພຣະເຈົ້າເຫັນຫມາຍສຳຄັນໃນສະຫວັນ, ອີກຢ່າງຫນຶ່ງທີ່ຍິ່ງໃຫຍ່ ແລະອັດສະຈັນ ຄືມີທູດສະຫວັນເຈັດອົງຖືພັຍພິບັດເຈັດຢ່າງ,
ເຊິ່ງເປັນພັຍພິບັດສຸດທ້າຍ, ເພາະວ່າຄວາມໂກດຮ້າຍຂອງພຣະເຈົ້າຈະສິ້ນສຸດລົງດ້ວຍພັຍພິບັດເຫລົ່ານັ້ນ.

[2]ຂ້າພຣະເຈົ້າເຫັນສິ່ງທີ່ເບິ່ງຄືເປັນທະເລແກ້ວປົນກັບໄຟ. ຄົນເຫລົ່ານັ້ນທີ່ຢືນຢູ່ແຄມທະເລຄືບັນດາຄົນທີ່ມີຊັຍຊະນະຕໍ່ສັດຮ້າຍ
ແລະຕໍ່ຮູບຂອງມັນ ແລະຕໍ່ຕົວເລກທີ່ສະແດງເຖິງຊື່ຂອງມັນ. ພວກເຂົາທັງຫລາຍຖືພິນທີ່ພຣະເຈົ້າປຣະທານໃຫ້.
[3]ພວກເຂົາຮ້ອງເພງຂອງໂມເຊ, ຜູ້ຮັບໃຊ້ຂອງພຣະເຈົ້າ ແລະຮ້ອງເພງຂອງພຣະເມສານ້ອຍວ່າ: "ຂ້າແດ່ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າຜູ້ຊົງຣິດທານຸພາບສູງສຸດ, ພຣະຣາຊກິດຂອງພຣະອົງຍິ່ງໃຫຍ່ແລະອັດສະຈັນ, ຂ້າແດ່ອົງພຣະມະຫາກະສັດແຫ່ງບັນດາປະຊາຊາດ,
ວິຖີທາງຂອງພຣະອົງກໍຖືກຕ້ອງແລະສັດຈິງ.[4]ຂ້າແດ່ອົງພຣະຜູ້ເປັນເຈົ້າ, ມີໃຜແດ່ບໍ່ຢ້ານພຣະອົງ, ແລະຖວາຍກຽດແດ່ພຣະນາມຂອງພຣະອົງ?
ເພາະພຣະອົງຜູ້ດຽວຊົງບໍຣິສຸດ ບັນດາປະຊາຊາດທັງຫລາຍຈະມານະມັດສະການຕໍ່ຫນ້າພຣະອົງ
ເພາະກິດຈະການອັນຊອບທັມຂອງພຣະອົງໄດ້ປາກົດໃຫ້ເຫັນແລ້ວ."
[5]ຫລັງຈາກສິ່ງເຫລົ່ານີ້ເກີດຂຶ້ນແລ້ວ, ຂ້າພຣະເຈົ້າເບິ່ງເຫັນພຣະວິຫານຊຶ່ງມີຫໍເຕັນສັກສິດແຫ່ງຄຳພະຍານໄດ້ເປີດອອກໃນສະຫວັນ.
[6]ແລະທູດສະຫວັນທັງເຈັດອົງທີ່ຖືພັຍພິບັດທັງເຈັດຢ່າງ ໄດ້ອອກມາຈາກສະຖານສັກສິດທີ່ສຸດ
ທູດສະຫວັນເຫລົ່ານັ້ນນຸ່ງຫົ່ມຜ້າປ່ານບໍຣິສຸດເສາະໃສ ແລະໃສ່ສາຍຮັດຫນ້າເອິກທີ່ເຮັດດ້ວຍຄຳ.
[7]ຫນຶ່ງໃນສິ່ງມີຊີວິດທັງສີ່ຕົນນັ້ນ ໄດ້ມອບຂັນຄຳເຈັດຫນ່ວຍທີ່ເຕັມໄປດ້ວຍຄວາມໂກດຮ້າຍຂອງພຣະເຈົ້າ,
ຜູ້ຊົງພຣະຊົນຢູ່ເປັນນິດໃຫ້ແກ່ທູດສະຫວັນທັງເຈັດອົງນັ້ນ.[8]ແລ້ວພຣະວິຫານກໍເຕັມໄປດ້ວຍຄວັນຊຶ່ງມາຈາກພຣະສະຫງ່າຣາສີຂອງພຣະເຈົ້າ
ແລະມາຈາກຣິດອຳນາດຂອງພຣະອົງ ບໍ່ມີໃຜສາມາດເຂົ້າໄປໃນພຣະວິຫານນັ້ນ
ຈົນກວ່າພັຍພິບັດທັງເຈັດຂອງທູດສະຫວັນເຈັດອົງນັ້ນຈະສຳເລັດລົງ.

 generated on Tue Jun 17 19:01:42 2025

16 [1]ຂ້າພຣະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ ສັ່ງທູດສະຫວັນທັງເຈັດອົງນັ້ນວ່າ,
"ຈົ່ງອອກໄປແລ້ວເທຂັນແຫ່ງຄວາມໂກດຮ້າຍຂອງພຣະເຈົ້າທັງເຈັດຫນ່ວຍລົງເທິງແຜ່ນດິນໂລກ."

[2]ທູດສະຫວັນອົງທຳອິດຈຶ່ງອອກໄປ ແລະເທຂັນຂອງຕົນລົງເທິງແຜ່ນດິນໂລກ; ແລ້ວຄົນທັງຫລາຍທີ່ມີເຄື່ອງຫມາຍຂອງສັດຮ້າຍ
ແລະພວກທີ່ບູຊາຮູບຂອງມັນກໍມີບາດແຜຮ້າຍທີ່ຫນ້າກຽດຊັງ, ແລະເຈັບປວດເກີດຂຶ້ນຕາມຕົນຕົວ.
[3]ທູດສະຫວັນອົງທີສອງເທຂັນຂອງຕົນລົງໃນທະເລແລະທະເລກໍກາຍເປັນເລືອດເຫມືອນເລືອດຂອງຄົນຕາຍ,
ແລະສິ່ງມີຊີວິດທັງຫມົດຊຶ່ງຢູ່ໃນທະເລນັ້ນກໍຕາຍໄປຫມົດ.
[4]ທູດສະຫວັນອົງທີສາມເທຂັນຂອງຕົນລົງໄປໃນແມ່ນ້ຳແລະນ້ຳພຸທັງຫລາຍ, ແລະນ້ຳເຫລົ່ານັ້ນກໍກາຍເປັນເລືອດ.
[5]ຂ້າພຣະເຈົ້າໄດ້ຍິນທູດສະຫວັນແຫ່ງຫນ້ານ້ຳຕ່າງໆກ່າວວ່າ, "ພຣະອົງຊົງຊອບທັມ ຜູ້ຊົງເປັນຢູ່ແລະເຄີຍເປັນຢູ່, ແລະຜູ້ຊົງບໍຣິສຸດ,
ເພາະພຣະອົງໄດ້ຊົງພິພາກສາສິ່ງເຫລົ່ານີ້ແລ້ວ.[6]ເພາະພວກເຂົາເຮັດໃຫ້ເລືອດຂອງບັນດາຜູ້ເຊື່ອ ແລະຜູ້ປະກາດພຣະຄັມໄຫລອອກ,
ແລະພຣະອົງຊົງໃຫ້ເຂົາດື່ມເລືອດຊຶ່ງເປັນສິ່ງທີ່ພວກເຂົາສົມຄວນໄດ້ຮັບແລ້ວ."[7]ແລ້ວຂ້າພຣະເຈົ້າໄດ້ຍິນແທ່ນບູຊາຕອບວ່າ, "ຖືກແລ້ວ,
ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງຣິດອຳນາດຍິ່ງໃຫຍ່, ການພິພາກສາຂອງພຣະອົງສັດຈິງ ແລະຊອບທັມ."
[8]ທູດສະຫວັນອົງທີສີ່ເທຂັນຂອງຕົນລົງໄປທີ່ຕາເວັນ, ແລະອະນຸຍາດໃຫ້ຕາເວັນເຜົາໄຫມ້ມະນຸດດ້ວຍຄວາມຮ້ອນອັນແຮງກ້າ.
[9]ຄວາມຮ້ອນແຮງຂອງແສງແດດກ້າກໍເຜົາໄຫມ້ມະນຸດ ແລະພວກເຂົາກໍສາບແຊ່ງພຣະນາມຂອງພຣະເຈົ້າຜູ້ຊົງຣິດເຫນືອພັຍພິບັດເຫລົ່ານີ້.
ພວກເຂົາບໍ່ຍອມກັບໃຈໃຫມ່ເພື່ອຖວາຍກຽດແດ່ພຣະອົງ.
[10]ຫລັງຈາກນັ້ນ ທູດສະຫວັນອົງທີຫ້າເທຂັນຂອງຕົນລົງເທິງບັນລັງຂອງສັດຮ້າຍ, ແລ້ວຄວາມມືດກໍປົກຄຸມອານາຈັກຂອງສັດຮ້າຍ
ຄົນເຫລົ່ານັ້ນກໍກັດລີ້ນຂອງຕົນເອງເພາະຄວາມເຈັບປວດ.[11]ແລະພວກເຂົາສາບແຊ່ງພຣະເຈົ້າແຫ່ງຟ້າສະຫວັນ ເພາະຄວາມເຈັບປວດ
ແລະເພາະບາດແຜຕາມຮ່າງກາຍຂອງພວກເຂົາ, ແຕ່ພວກເຂົາຍັງບໍ່ຍອມກັບໃຈຈາກການກະທຳຂອງຕົນ.
[12]ທູດສະຫວັນອົງທີຫົກເທຂັນຂອງຕົນລົງໄປທີ່ແມ່ນ້ຳໃຫຍ່ ຄືແມ່ນ້ຳເອີຟຣັດ. ເຮັດໃຫ້ນ້ຳນັ້ນແຫ້ງ
ເພື່ອຕຽມທາງໄວ້ສຳລັບບັນດາກະສັດທີ່ຈະມາຈາກທິດຕາເວັນອອກ.
[13]ແລ້ວຂ້າພຣະເຈົ້າເຫັນວິນຍານຊົ່ວຮ້າຍສາມດວງຊຶ່ງມີຮູບຮ່າງເຫມືອນໂຕກົບອອກມາຈາກປາກຂອງພະຍານາກ, ຈາກປາກສັດຮ້າຍ
ແລະຈາກປາກຜູ້ປະກາດພຣະຄັມປອມ.[14]ເພາະວ່າພວກມັນເປັນວິນຍານແຫ່ງຜີມານຮ້າຍທີ່ເຮັດຫມາຍສຳຄັນການອັດສະຈັນ,
ພວກມັນອອກໄປຫາບັນດາກະສັດທົ່ວໂລກ ເພື່ອລວບລວມເອົາບັນດາກະສັດເຫລົ່ານັ້ນໄປ
ເຮັດສົງຄາມໃນວັນອັນໃຫຍ່ຫລວງຂອງພຣະເຈົ້າຜູ້ຊົງຍິ່ງໃຫຍ່ສູງສຸດ.
[15](ເບິ່ງແມ! ເຮົາກຳລັງມາເຫມືອນຂະໂມຍ ຄົນທີ່ເຝົ້າຣະວັງຢູ່ແລະສວມເສື້ອຜ້າຂອງຕົນໄວ້ກໍເປັນສຸກ
ເພາະວ່າເຂົາຈະບໍ່ຕ້ອງອອກໄປແບບເປືອຍກາຍໃຫ້ຄົນທັງຫລາຍເຫັນສະພາບອັນອັບອາຍຂອງເຂົາ).
[16]ແລ້ວວິນຍານທັງສາມໄດ້ຮວບຮວມບັນດາກະສັດເຫລົ່ານັ້ນໄປສະຖານທີ່ຫນຶ່ງເອີ້ນຕາມພາສາເຮັບເຣີວ່າ ອາມາເຄໂດນ.
[17]ຫລັງຈາກນັ້ນ ທູດສະຫວັນອົງທີເຈັດເທຂັນຂອງຕົນລົງໄປໃນອາກາດ. ແລະມີພຣະສຸຣະສຽງດັງອອກມາຈາກບັນລັງໃນພຣະວິຫານນັ້ນວ່າ
"ສຳເລັດແລ້ວ."[18]ແລ້ວເກີດມີຟ້າແມບ ສຽງແຕກດັງສະນັ່ນ, ສຽງຟ້າຮ້ອງ ແລະແຜ່ນດິນໄຫວຮຸນແຮງ,
ຊຶ່ງເປັນແຜ່ນດິນໄຫວທີ່ຮຸນແຮງກວ່າແຜ່ນດິນໄຫວໃດໆທີ່ເຄີຍເກີດຂຶ້ນຕັ້ງແຕ່ມະນຸດເກີດຂຶ້ນມາເທິງແຜ່ນດິນໂລກ,
ແຜ່ນດິນໄຫວຄັ້ງນີ້ຮຸນແຮງຫລາຍ.[19]ມະຫານະຄອນນັ້ນກໍແຍກອອກເປັນສາມສ່ວນ ແລະເມືອງທັງຫລາຍຂອງບັນດາປະຊາຊາດກໍພັງລົງ
ແລ້ວພຣະເຈົ້າຊົງຣະນຶກເຖິງມະຫານະຄອນບາບີໂລນ
ແລະພຣະອົງຊົງໃຫ້ນະຄອນນີ້ດື່ມເຫລົ້າອະງຸ່ນທີ່ເຮັດມາຈາກຄວາມໂກດຮ້າຍອັນຮຸນແຮງຂອງພຣະອົງ.
[20]ແລ້ວເກາະທັງຫມົດກໍສູນຫາຍໄປ ແລະພູທັງໝົດກໍຫາບໍ່ພົບ.
[21]ຫມາກເຫັບໃຫຍ່ຊຶ່ງມີນ້ຳຫນັກກ້ອນລະຫ້າສິບກິໂລກໍຕົກຈາກຟ້າລົງມາຖືກຄົນທັງຫລາຍ,
ພວກເຂົາກໍສາບແຊ່ງພຣະເຈົ້າເນື່ອງດ້ວຍພັຍພິບັດທີ່ເກີດຈາກຫມາກເຫັບນັ້ນ ເພາະພັຍພິບັດນັ້ນຮຸນແຮງຫລາຍ.

 generated on Tue Jun 17 19:01:42 2025

17 [1]ທູດສະຫວັນອົງຫນຶ່ງໃນເຈັດອົງທີ່ຖືຂັນເຈັດອັນນັ້ນ ກໍມາເວົ້າກັບຂ້າພຣະເຈົ້າວ່າ, "ຈົ່ງມາເທາະ
ເຮົາຈະໃຫ້ທ່ານເບິ່ງການລົງໂທດຍິງແມ່ຈ້າງຄົນສຳຄັນທີ່ນັ່ງຢູ່ເທິງນ້ຳຫຼາຍ.[2]ຄືຍິງທີ່ບັນດາກະສັດແຫ່ງແຜ່ນດິນໂລກລ່ວງປະເວນີນຳນາງ
ແລະຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກກໍເມົາດ້ວຍເຫລົ້າອະງຸ່ນແຫ່ງການລ່ວງປະເວນີຂອງນາງ."

[3]ແລ້ວທູດສະຫວັນນັ້ນກໍນຳຂ້າພຣະເຈົ້າໄປໃນຖິ່ນແຫ້ງແລ້ງກັນດານໂດຍພຣະວິນຍານ,
ແລະຂ້າພຣະເຈົ້າເຫັນຍິງຄົນຫນຶ່ງນັ່ງຢູ່ເທິງສັດຮ້າຍສີແດງເຂັ້ມໂຕຫນຶ່ງ ຊຶ່ງເຕັມໄປດ້ວຍຊື່ເປັນຄຳຫມິ່ນປະມາດພຣະເຈົ້າ.
ສັດຮ້າຍນັ້ນມີເຈັດຫົວແລະສິບເຂົາ.[4]ຍິງຄົນນັ້ນສວມຊຸດສີມ່ວງແລະແດງເຂັ້ມ ແລະປະດັບດ້ວຍຄຳ ເຄື່ອງປະດັບຕ່າງໆ ແລະໄຂ່ມຸກ,
ໃນມືຂອງນາງຖືຖ້ວຍຄຳທີ່ເຕັມໄປດ້ວຍສິ່ງທີ່ຫນ້າກຽດຫນ້າຊັງ ແລະສິ່ງທີ່ເປັນມົນທິນຈາກການລ່ວງປະເວນີຂອງນາງ.
[5]ເທິງຫນ້າຜາກຂອງນາງມີຊື່ທີ່ມີຄວາມຫມາຍເລິກລັບຂຽນໄວ້ວ່າ "ບາບີໂລນນະຄອນໃຫຍ່ ແມ່ຂອງຍິງແມ່ຈ້າງທັງຫລາຍ
ແລະແມ່ຂອງບັນດາສິ່ງຫນ້າກຽດຫນ້າຊັງແຫ່ງແຜ່ນດິນໂລກ."
[6]ຂ້າພຣະເຈົ້າເຫັນຍິງນັ້ນເມົາດ້ວຍເລືອດຂອງບັນດາຜູ້ເຊື່ອ ແລະເລືອດຂອງບັນດາຜູ້ສະຫລະຊີວິດເພາະເປັນພະຍານຝ່າຍພຣະເຢຊູເຈົ້າ.
ເມື່ອຂ້າພຣະເຈົ້າເຫັນນາງ ຂ້າພຣະເຈົ້າກໍອັດສະຈັນໃຈຫລາຍ.[7]ແຕ່ທູດສະຫວັນອົງນັ້ນກ່າວກັບຂ້າພຣະເຈົ້າວ່າ
"ຍ້ອນຫຍັງທ່ານຈຶ່ງອັດສະຈັນໃຈ?
ເຮົາຈະບອກໃຫ້ທ່ານຮູ້ເຖິງຄວາມຫມາຍອັນເລິກລັບຂອງຍິງນັ້ນແລະສັດຮ້າຍທີ່ມີເຈັດຫົວແລະສິບເຂົາທີ່ເປັນພາຫະນະຂອງນາງ.
[8]ສັດຮ້າຍທີ່ທ່ານເຫັນນັ້ນ ມັນເຄີຍເປັນຢູ່ໃນຄາວກ່ອນ ແຕ່ບໍ່ໄດ້ເປັນຢູ່ໃນຂະນະນີ້, ມັນກຳລັງຈະຂຶ້ນມາຈາກເຫວເລິກ, ແລ້ວໄປສູ່ຄວາມພິນາດ,
ຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກຊຶ່ງບໍ່ມີຊື່ຈົດໄວ້ໃນຫນັງສືແຫ່ງຊີວິດຕັ້ງແຕ່ເລີ່ມຕົ້ນເນຣະມິດສ້າງໂລກ
ກໍຈະອັດສະຈັນໃຈເມື່ອເຫັນສັດຮ້າຍຊຶ່ງເຄີຍເປັນຢູ່, ແຕ່ບໍ່ໄດ້ເປັນຢູ່ໃນຂະນະນີ້, ແລະກຳລັງຈະມາປາກົດອີກ.
[9]ສິ່ງນີ້ຕ້ອງໃຊ້ຄວາມຄິດຢ່າງມີປັນຍາ ຫົວທັງເຈັດນັ້ນຄືເນີນເຂົາເຈັດຫນ່ວຍທີ່ຍິງນັ້ນນັ່ງຢູ່[10]ແລະຫມາຍເຖິງກະສັດເຈັດອົງ.
ຫ້າອົງໄດ້ລ່ວງລັບໄປແລ້ວ, ອົງຫນຶ່ງກຳລັງເປັນຢູ່, ສ່ວນອີກອົງຫນຶ່ງຍັງບໍ່ໄດ້ສະເດັດມາ, ຖ້າມາແລ້ວກໍຈະຢູ່ໄດ້ພຽງໄລຍະສັ້ນໆເທົ່ານັ້ນ.
[11]ສັດຮ້າຍທີ່ເຄີຍເປັນຢູ່ ແຕ່ບໍ່ໄດ້ເປັນຢູ່ໃນຂະນະນີ້ ເປັນກະສັດອົງທີ່ແປດ; ແຕ່ກໍຍັງເປັນຫນຶ່ງໃນກະສັດເຈັດອົງນັ້ນ
ແລະກຳລັງໄປສູ່ຄວາມພິນາດ.
[12]ເຂົາທັງສິບເຂົາທີ່ທ່ານເຫັນນັ້ນຄືກະສັດສິບອົງທີ່ຍັງບໍ່ໄດ້ຮັບຣາຊອານາຈັກ,
ແຕ່ຈະຮັບສິດທິອຳນາດເຫມືອນຢ່າງກະສັດດ້ວຍກັນກັບສັດຮ້າຍໂຕນັ້ນຫນຶ່ງຊົ່ວໂມງ.[13]ກະສັດເຫລົ່ານີ້ມີຄວາມເຫັນອັນດຽວກັນ,
ແລະຈະມອບຣິດອຳນາດ ແລະສິດທິອຳນາດຂອງຕົນແກ່ສັດຮ້າຍນັ້ນ.[14]ພວກເຂົາຈະຕໍ່ສູ້ກັບພຣະເມສານ້ອຍ.
ແຕ່ພຣະເມສານ້ອຍຈະເອົາຊະນະເຂົາ ເພາະວ່າພຣະອົງຊົງເປັນເຈົ້ານາຍເຫນືອເຈົ້ານາຍທັງຫມົດ,
ແລະຊົງເປັນມະຫາກະສັດເຫນືອກະສັດທັງຫມົດ ແລະບັນດາຜູ້ທີ່ຢູ່ກັບພຣະອົງນັ້ນ ກໍເປັນຜູ້ທີ່ໄດ້ຮັບການຊົງເອີ້ນ ໄດ້ຮັບການຊົງເລືອກ
ແລະເປັນຜູ້ທີ່ສັດຊື່"ກໍຈະມີໄຊດ້ວຍກັນກັບພຣະອົງ.
[15]ທູດສະຫວັນອົງນັ້ນບອກຂ້າພຣະເຈົ້າວ່າ "ແມ່ນ້ຳທັງຫລາຍທີ່ທ່ານເຫັນຊຶ່ງເປັນບ່ອນທີ່ຍິງແມ່ຈ້າງນັ່ງຢູ່ນັ້ນ, ຄືຄົນທັງຫລາຍ, ເຫລົ່າຝູງຊົນ,
ບັນດາປະຊາຊາດ ແລະພາສາຕ່າງໆ.
[16]ເຂົາສິບເຂົາທີ່ທ່ານເຫັນ ແລະສັດຮ້າຍນັ້ນຈະກຽດຊັງຍິງແມ່ຈ້າງນັ້ນ. ພວກມັນຈະເຮັດໃຫ້ນາງເປົ່າປ່ຽວ ແລະເປືອຍກາຍ
ພວກມັນຈະຫຸ້ມກິນຊີ້ນຂອງນາງ, ແລະເອົາໄຟເຜົານາງຈົນບໍ່ເຫລືອຊາກ.
[17]ເພາະວ່າພຣະເຈົ້າຊົງບັນດານໃຈພວກມັນໃຫ້ເຮັດຕາມຄຳສັ່ງຂອງພຣະອົງ
ໂດຍມີຄວາມເຫັນຢ່າງດຽວກັນໃນການມອບອຳນາດໃນການປົກຄອງຂອງພວກມັນໃຫ້ແກ່ສັດຮ້າຍນັ້ນຈົນກວ່າພຣະຄັມຂອງພຣະເຈົ້າຈະສຳເລັດ.
[18]ແລະຍິງທີ່ທ່ານເຫັນນັ້ນຄືນະຄອນທີ່ປົກຄອງຢູ່ເຫນືອບັນດາກະສັດຂອງແຜ່ນດິນໂລກ."


generated on Tue Jun 17 19:01:42 2025

# 18

[1]ຫລັງຈາກນັ້ນ ຂ້າພຣະເຈົ້າເຫັນທູດສະຫວັນອີກອົງຫນຶ່ງລົງມາຈາກສະຫວັນ, ທ່ານມີສິດທິອຳນາດຍິ່ງໃຫຍ່,
ແລະຣັດສະຫມີຂອງທ່ານເຮັດໃຫ້ແຜ່ນດິນໂລກແຈ້ງສະຫວ່າງ.[2]ທ່ານຮ້ອງປະກາດດ້ວຍສຽງອັນດັງວ່າ,
"ບາບີໂລນນະຄອນໃຫຍ່ຫລົ້ມຈົມແລ້ວ, ຫລົ້ມຈົມແລ້ວກາຍເປັນທີ່ອາໄສຂອງພວກຜີມານຮ້າຍ ເປັນທີ່ຢູ່ຂອງວິນຍານຊົ່ວຮ້າຍທຸກຊະນິດ,
ແລະເປັນທີ່ຢູ່ຂອງນົກທີ່ສົກກະປົກ, ແລະຫນ້າກຽດຫນ້າຊັງທຸກຊະນິດ.
[3]ເພາະປະຊາຊາດທັງຫມົດໄດ້ດື່ມເຫລົ້າອະງຸ່ນແຫ່ງຣາຄະຕັນຫາໃນການລ່ວງປະເວນີຂອງນະຄອນນັ້ນ.
ບັນດາກະສັດແຫ່ງແຜ່ນດິນໂລກໄດ້ລ່ວງປະເວນີກັບນະຄອນນັ້ນ.
ແລະພໍ່ຄ້າທັງຫລາຍແຫ່ງແຜ່ນດິນໂລກກໍ່ຮັ່ງມີຂຶ້ນຈາກອຳນາດແຫ່ງການໃຊ້ຊີວິດດ້ວຍຊັບອັນຟຸມເຟືອຍຂອງນະຄອນນັ້ນ."

[4]ແລ້ວຂ້າພຣະເຈົ້າໄດ້ຍິນອີກສຽງຫນຶ່ງຈາກສະຫວັນວ່າ "ຈົ່ງອອກມາຈາກມະຫານະຄອນນັ້ນເສັຍ, ປະຊາຊົນຂອງເຮົາເອີຍ
ເພື່ອເຈົ້າຈະບໍ່ມີສ່ວນໃນຄວາມບາບຂອງນະຄອນນັ້ນ, ແລະເພື່ອເຈົ້າຈະບໍ່ຕ້ອງຮັບພັຍພິບັດໃດໆຂອງນະຄອນນັ້ນ.
[5]ບາບຂອງນະຄອນນັ້ນກອງສູງຂຶ້ນພຽງຟ້າແລ້ວ, ແລະພຣະເຈົ້າໄດ້ຊົງຈົດຈຳຄວາມປະພຶດຊົ່ວຮ້າຍຂອງນະຄອນນັ້ນແລ້ວ.
[6]ຈົ່ງຕອບສະຫນອງນະຄອນນັ້ນເຫມືອນຢ່າງທີ່ນະຄອນນັ້ນເຄີຍຕອບສະຫນອງຄົນອື່ນໆ,
ແລະຈົ່ງຕອບສະຫນອງການກະທຳຂອງນະຄອນນັ້ນເປັນສອງເທົ່າໃນສິ່ງທີ່ນະຄອນນັ້ນໄດ້ກະທຳ; ໃນຖ້ວຍທີ່ນະຄອນນັ້ນໄດ້ປະສົມໄວ້
ກໍ່ຈົ່ງປະສົມລົງໄປເປັນສອງເທົ່າໃຫ້ນະຄອນນັ້ນ.
[7]ນະຄອນນັ້ນໃຫ້ກຽດຕົນເອງແລະໃຊ້ຊີວິດຢ່າງຟຸມເຟືອຍຫລາຍເທົ່າໃດ, ກໍ່ຈົ່ງມອບຄວາມທໍຣະມານ
ແລະຄວາມໂສກເສົ້າໃຫ້ແກ່ນະຄອນນັ້ນຫລາຍເທົ່ານັ້ນ, ເພາະນະຄອນນັ້ນເວົ້າໃນໃຈວ່າ ເຮົາຢູ່ໃນຕຳແຫນ່ງຣາຊີນີ ເຮົາບໍ່ແມ່ນຍິງຫມ້າຍ
ແລະເຮົາຈະບໍ່ມີວັນພົບກັບຄວາມໂສກເສົ້າເລີຍ.[8]ດ້ວຍເຫດນີ້ພັຍພິບັດຕ່າງໆຈະມາເຖິງນະຄອນນັ້ນພາຍໃນວັນດຽວ, ຄືຄວາມຕາຍ,
ຄວາມໂສກເສົ້າ ແລະຄວາມອຶດຢາກແລະໄຟຈະເຜົາຜານນະຄອນນັ້ນ, ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າຊົງຣິດອຳນາດຍິ່ງໃຫຍ່
ແລະພຣະອົງຊົງເປັນຜູ້ພິພາກສານະຄອນນັ້ນ."
[9]ບັນດາກະສັດແຫ່ງແຜ່ນດິນໂລກທີ່ລ່ວງປະເວນີ ແລະໃຊ້ຊີວິດຢ່າງສະຫນຸກສະຫນານກັບນະຄອນນັ້ນ ຈະຮ້ອງໄຫ້
ແລະຮ່ຳໄຮເມື່ອເຫັນຄວັນໄຟທີ່ເຜົາໄຫມ້ນະຄອນນັ້ນ[10]ພວກເຂົາຈະອອກໄປຢືນຢູ່ຫ່າງໆດ້ວຍຄວາມຢ້ານຫລາຍການທໍຣະມານນະຄອນນັ້ນ,
ແລະກ່າວວ່າ "ວິບັດ, ວິບັດແກ່ນະຄອນທີ່ຍິ່ງໃຫຍ່, ບາບີໂລນ, ນະຄອນທີ່ເຂັ້ມແຂງ! ເພາະການລົງໂທດມາເຖິງເຈົ້າແລ້ວພາຍໃນຊົ່ວໂມງດຽວ."
[11]ບັນດາພໍ່ຄ້າແຫ່ງແຜ່ນດິນໂລກຈະຮ້ອງໄຫ້ ແລະໂສກເສົ້າເນື່ອງຈາກນະຄອນນັ້ນ, ເພາະບໍ່ມີໃຜຊື້ສິນຄ້າຂອງເຂົາອີກຕໍ່ໄປແລ້ວ.
[12]ສິນຄ້າເຫລົ່ານັ້ນຄື ຄຳ ເງິນເພັດພອຍ ຕ່າງໆ ໄຂ່ມຸກ ຜ້າປ່ານເນື້ອລະອຽດດີ ຜ້າສີມ່ວງ ຜ້າໄຫມ ຜ້າສີແດງເຂັ້ມ ໄມ້ຫອມທຸກຊະນິດ
ພາຊະນະທຸກຢ່າງທີ່ເຮັດມາຈາກງາຊ້າງ ພາຊະນະທຸກຢ່າງທີ່ເຮັດຈາກໄມ້ລ້ຳຄ່າ ທອງເຫລືອງ ເຫລັກ ຫີນອ່ອນ.[13]ອົບເຊີຍ, ເຄື່ອງເທດ,
ເຄື່ອງຫອມ, ນ້ຳມັນເຜົາເຄື່ອງຫອມ, ກຳຍານ, ເຫລົ້າອະງຸ່ນ ນ້ຳມັນຫມາກກອກເທດ, ແປ້ງຢ່າງດີ, ເຂົ້າບະເລ, ງົວແລະແກະ, ມ້າແລະລົດມ້າ,
ລວມເຖິງຂ້ອຍໃຊ້ແລະຊີວິດຈິດໃຈມະນຸດດ້ວຍ.
[14]ຜົນທຸກຢ່າງທີ່ເຈົ້າປາຖະຫນາດ້ວຍສຸດໃຈນັ້ນກໍ່ຫາຍໄປຈາກເຈົ້າ. ສິ່ງທີ່ຫລູຫລາ ແລະງາມສະຫງ່າທັງຫມົດຂອງເຈົ້າກໍ່ຫາຍໄປ,
ບໍ່ມີໃຜໄດ້ພົບເຫັນອີກເລີຍ.
[15]ບັນດາພໍ່ຄ້າທີ່ຂາຍສິນຄ້າເຫລົ່ານີ້ຊຶ່ງຮັ່ງມີຂຶ້ນມາເພາະນະຄອນນັ້ນ ຈະຢືນຢູ່ຫ່າງໆ ເພາະຢ້ານຕໍ່ການທໍລະມານນະຄອນນັ້ນ
ພວກເຂົາຈະຮ້ອງໄຫ້ແລະໂສກເສົ້າຢ່າງຫນັກ.[16]ແລະກ່າວວ່າ ວິບັດ, ວິບັດແກ່ນະຄອນຍິ່ງໃຫຍ່ທີ່ສວມໃສ່ຜ້າປ່ານເນື້ອລະອຽດດີ ຜ້າສີມ່ວງ
ແລະຜ້າສີແດງເຂັ້ມ ແລະປະດັບດ້ວຍຄຳ ເຄື່ອງປະດັບ ແລະໄຂ່ມຸກນັ້ນ.[17]ພາຍໃນຊົ່ວໂມງດຽວ ຊັບສົມບັດທັງຫມົດນັ້ນກໍ່ໄດ້ຫມົດກ້ຽງໄປ.
ນາຍສະເພົາທຸກຄົນແລະໂດຍສານພວກລູກເຮືອ, ແລະທຸກຄົນທີ່ມີອາຊີບຫາກິນທາງທະເລ ພວກເຫລົ່ານີ້ຕ່າງກໍ່ຢືນຢູ່ຫ່າງ ໆ.
[18]ພວກເຂົາສົ່ງສຽງຮ້ອງເມື່ອເຫັນຄວັນໄຟທີ່ເຜົາໄຫມ້ນະຄອນນັ້ນ. ແລະກ່າວວ່າ
"ນະຄອນໃດຈະເຫມືອນນະຄອນນີ້?"[19]ແລະສົ່ງສຽງຮ້ອງໄຫ້ໂສກເສົ້າວ່າ, "ວິບັດ,
ວິບັດແກ່ນະຄອນຍິ່ງໃຫຍ່ທີ່ຊຶ່ງທຸກຄົນທີ່ມີເຮືອທາງທະເລຕ່າງກໍ່ຮັ່ງມີຂຶ້ນຈາກຄວາມມັ່ງຄັ່ງຂອງນະຄອນນັ້ນ, ເພາະພາຍໃນຊົ່ວໂມງດຽວ
ນະຄອນນັ້ນກໍ່ຖືກທຳລາຍລົງ."[20]"ຈົ່ງຊື່ນຊົມຍິນດີເພາະນະຄອນນັ້ນເທາະ, ເມືອງສະຫວັນ, ເຈົ້າຜູ້ເຊື່ອທັງຫລາຍ, ອັກຄະສາວົກທັງຫລາຍ,
ແລະບັນດາຜູ້ປະກາດພຣະຄັມ ເພາະພຣະເຈົ້າຊົງພິພາກສາລົງໂທດນະຄອນນັ້ນໃຫ້ກັບເຈົ້າທັງຫລາຍແລ້ວ."
[21]ທູດສະຫວັນອົງຫນຶ່ງທີ່ມີຣິດອຳນາດກໍ່ຍົກຫີນກ້ອນຫນຶ່ງທີ່ເຫມືອນຫີນໂມ້ແປ້ງຂະຫນາດໃຫຍ່ຂຶ້ນມາ, ແລະໂຍນລົງໄປໃນທະເລແລ້ວກ່າວວ່າ,
"ບາບີໂລນ, ນະຄອນທີ່ຍິ່ງໃຫຍ່, ຈະຖືກໂຍນລົງຢ່າງຮຸນແຮງເຊັ່ນນີ້ ແລະຈະບໍ່ມີໃຜໄດ້ພົບເຫັນນະຄອນນັ້ນອີກເລີຍ.
[22]ຈະບໍ່ມີໃຜໄດ້ຍິນສຽງນັກດີດພິນ ນັກດົນຕຣີ ນັກເປົ່າຂຸ່ຍ ແລະນັກເປົ່າແກ, ໃນຕົວເຈົ້າອີກຕໍ່ໄປ,
ຈະບໍ່ມີໃຜໄດ້ພົບເຫັນຊ່າງຝີມືໃດໆໃນຕົວເຈົ້າອີກຕໍ່ໄປ. ຈະບໍ່ມີໃຜໄດ້ຍິນສຽງໂມ້ແປ້ງໃນຕົວເຈົ້າອີກຕໍ່ໄປ.
[23]ຈະບໍ່ມີແສງໂຄມໄຟສ່ອງສະຫວ່າງໃນຕົວເຈົ້າອີກຕໍ່ໄປ. ຈະບໍ່ມີໃຜໄດ້ຍິນສຽງຂອງເຈົ້າບ່າວ, ແລະເຈົ້າສາວໃນຕົວເຈົ້າອີກຕໍ່ໄປ,
ເພາະພວກພໍ່ຄ້າຂອງເຈົ້າເຄີຍເປັນຄົນໃຫຍ່ຄົນໂຕເທິງແຜ່ນດິນໂລກ ແລະບັນດາປະຊາຊາດກໍ່ຖືກລໍ້ລວງໂດຍເວດມົນຂອງເຈົ້າ.
[24]ໃນນະຄອນນັ້ນກໍ່ພົບເລືອດຂອງບັນດາຜູ້ປະກາດພຣະຄັມ ແລະຜູ້ເຊື່ອທັງຫລາຍ, ແລະເລືອດຂອງທຸກຄົນທີ່ຖືກຂ້າເທິງແຜ່ນດິນໂລກນັ້ນ."


generated on Tue Jun 17 19:01:42 2025

19 [1]ຫລັງຈາກນັ້ນ ຂ້າພຣະເຈົ້າໄດ້ຍິນເຫມືອນກັບສຽງດັງສະນັ່ນຂອງປະຊາຊົນຢ່າງຫລວງຫລາຍໃນສະຫວັນ ກ່າວວ່າ "ຮາເລລູຢາ
ຄວາມລອດພົ້ນ ພຣະສະຫງ່າຣາສີແລະຣິດອຳນາດຍິ່ງໃຫຍ່ເປັນຂອງພຣະເຈົ້າຂອງເຮົາທັງຫລາຍ.
[2]ການພິພາກສາຂອງພຣະອົງຖືກຕ້ອງແລະຍຸດຕິທັມ,
ເພາະພຣະອົງໄດ້ຊົງພິພາກສາຍິງໂສເພນີຄົນສຳຄັນທີ່ເຮັດໃຫ້ແຜ່ນດິນໂລກເສື່ອມຊາມດ້ວຍການລ່ວງປະເວນີຂອງນາງ.
ພຣະອົງຊົງແກ້ແຄ້ນຍິງຄົນນັ້ນທີ່ເຮັດໃຫ້ເລືອດຂອງບັນດາຜູ້ຮັບໃຊ້ຂອງພຣະອົງຫລັ່ງອອກມາ."

[3]ແລ້ວຄົນເຫລົ່ານັ້ນຮ້ອງຂຶ້ນເປັນຄັ້ງທີສອງວ່າ "ຮາເລລູຢາ
ຄວັນຈາກແປວໄຟທີ່ເຜົາໄຫມ້ນະຄອນນັ້ນກໍພຸ່ງຂຶ້ນຕະຫລອດໄປເປັນນິດ"[4]ພວກຜູ້ອາວຸໂສທັງຊາວສີ່ທ່ານແລະສິ່ງທີ່ມີຊີວິດທັງສີ່ກໍກົ້ມຂາບລົງນະມັດສະການພຣະເຈົ
ພວກເພິ່ນຮ້ອງວ່າ "ອາແມນ ຮາເລລູຢາ"
[5]ແລ້ວມີສຽງອອກມາຈາກບັນລັງວ່າ "ເຈົ້າຜູ້ຮັບໃຊ້ທຸກຄົນຂອງພຣະເຈົ້າ. ເຈົ້າທັງຫລາຍທີ່ຢຳເກງພຣະອົງ ທັງຄົນເລັກນ້ອຍ ແລະຄົນມີອຳນາດ,
ຈົ່ງສັນຣະເສີນແດ່ພຣະເຈົ້າຂອງເຮົາທັງຫລາຍ."
[6]ແລ້ວຂ້າພຣະເຈົ້າໄດ້ຍິນເຫມືອນຢ່າງສຽງຂອງຄົນຈຳນວນຫລວງຫລາຍເຫມືອນສຽງກ້ອງກັງວານຂອງນ້ຳຕົກຕາດທັງຫລາຍ,
ແລະເຫມືອນຢ່າງສຽງຟ້າຮ້ອງດັງສະນັ່ນວ່າ "ຮາເລລູຢາ ເພາະອົງພຣະຜູ້ເປັນເຈົ້າຊົງຄອບຄອງຢູ່, ຄືພຣະເຈົ້າຊົງຣິດອຳນາດຍິ່ງໃຫຍ່ສູງສຸດ.
[7]ຂໍໃຫ້ເຮົາທັງຫລາຍຊື່ນຊົມ ແລະປິຕິຍິນດີຢ່າງໃຫຍ່ ແລະຖວາຍພຣະກຽດແດ່ພຣະອົງ
ເພາະເຖິງເວລາແຫ່ງການສົມຣົດຂອງພຣະເມສານ້ອຍແລ້ວ, ແລະເຈົ້າສາວຂອງພຣະອົງກໍຕຽມຕົວພ້ອມແລ້ວ.
[8]ເຈົ້າສາວນັ້ນໄດ້ຮັບອະນຸຍາດໃຫ້ສວມໃສ່ຜ້າປ່ານເນື້ອລະອຽດສະຫວ່າງເສາະໃສແລະສະອາດ" (ເພາະວ່າຜ້າປ່ານເນື້ອລະອຽດນັ້ນຄືການປະພຶດອັນຊອບທັມຂອ
[9]ທູດສະຫວັນອົງນັ້ນບອກຂ້າພຣະເຈົ້າວ່າ, "ຈົ່ງຂຽນລົງໄປຢ່າງນີ້ວ່າ
ຄົນທັງຫລາຍທີ່ໄດ້ຮັບເຊີນມາງານລ້ຽງສົມຣົດຂອງພຣະເມສານ້ອຍກໍເປັນສຸກ," ທ່ານບອກອີກວ່າ
"ຖ້ອຍຄຳເຫລົ່ານີ້ເປັນຄຳສັດຈິງຂອງພຣະເຈົ້າ."[10]ແລ້ວຂ້າພຣະເຈົ້າກໍກົ້ມຕົວລົງໃກ້ຕີນຂອງທູດສະຫວັນເພື່ອຈະນະມັດສະການທ່ານ
ແຕ່ທ່ານກ່າວກັບຂ້າພຣະເຈົ້າວ່າ, "ຢ່າເຮັດເຊັ່ນນີ້ ເຮົາເປັນຜູ້ຮັບໃຊ້ເຊັ່ນດຽວກັບທ່ານ,
ແລະພີ່ນ້ອງຂອງທ່ານທີ່ຍຶດຖືຄຳພະຍານກ່ຽວກັບພຣະເຢຊູເຈົ້າຈົ່ງນະມັດສະການພຣະເຈົ້າເຖີ້ນ,
ເພາະວ່າຄຳພະຍານກ່ຽວກັບພຣະເຢຊູເຈົ້ານັ້ນເປັນຫົວໃຈຂອງການເປີດເຜີຍພຣະຄັມ."
[11]ແລ້ວຂ້າພຣະເຈົ້າເຫັນສະຫວັນເປີດອອກ ແລະຂ້າພຣະເຈົ້າເບິ່ງໄປເຫັນມ້າສີຂາວໂຕຫນຶ່ງ.
ພຣະອົງຜູ້ປະທັບເທິງຫລັງມ້ານັ້ນມີພຣະນາມວ່າສັດຊື່ແລະທ່ຽງແທ້. ພຣະອົງຊົງພິພາກສາແລະຊົງຕໍ່ສູ້ດ້ວຍຄວາມຊອບທັມ.
[12]ດວງຕາຂອງພຣະອົງເປັນເຫມືອນແປວໄຟ ແລະມີມົງກຸດຫລາຍອັນທີ່ເທິງຫົວຂອງພຣະອົງ,
ພຣະອົງຊົງມີພຣະນາມຈາຣຶກໄວ້ເທິງພຣະກາຍຂອງພຣະອົງຊຶ່ງບໍ່ມີໃຜຮູ້ຈັກເລີຍນອກຈາກພຣະອົງເອງ.
[13]ພຣະອົງຊົງນຸ່ງເສື້ອຄຸມທີ່ໄດ້ຈຸ່ມໃນເລືອດ ແລະພຣະນາມທີ່ເອີ້ນພຣະອົງນັ້ນຄືພຣະຄັມຂອງພຣະເຈົ້າ.
[14]ກອງທັບທັງຫລາຍໃນສະຫວັນຂີ່ມ້າຂາວຕາມພຣະອົງໄປ ຕ່າງກໍສວມໃສ່ຜ້າປ່ານເນື້ອລະອຽດ, ສີຂາວແລະສະອາດ.
[15]ມີດາບຄົມດວງຫນຶ່ງອອກມາຈາກປາກຂອງພຣະອົງຊຶ່ງໃຊ້ຟາດຟັນປະຊາຊາດຕ່າງໆ,
ແລະພຣະອົງຈະຊົງປົກຄອງພວກເຂົາທັງຫລາຍດ້ວຍໄມ້ຄ້ອນເຫລັກທີ່ມີອຳນາດ,
ພຣະອົງຊົງບີບນ້ຳອະງຸ່ນໃນອ່າງແຫ່ງຄວາມໂກດຮ້າຍອັນຮຸນແຮງຂອງພຣະເຈົ້າຜູ້ຊົງຣິດອຳນາດຍິ່ງໃຫຍ່ສູງສຸດ.
[16]ພຣະອົງຊົງມີພຣະນາມຈາຣຶກເທິງເສື້ອຄຸມຂອງພຣະອົງ ແລະທີ່ຕົ້ນຂາຂອງພຣະອົງວ່າ "ກະສັດເຫນືອກະສັດທັງຫລາຍ
ແລະເຈົ້ານາຍເຫນືອເຈົ້ານາຍທັງຫລາຍ."
[17]ແລ້ວຂ້າພຣະເຈົ້າເຫັນທູດສະຫວັນອົງຫນຶ່ງຢືນຢູ່ເທິງຕາເວັນ ທ່ານຮ້ອງປະກາດດ້ວຍສຽງດັງແກ່ນົກທັງຫມົດທີ່ບິນໄປມາຢູ່ກາງອາກາດວ່າ,
"ຈົ່ງມາໂຮມກັນໃນງານກິນລ້ຽງຂອງພຣະເຈົ້າອັນຍິ່ງໃຫຍ່.[18]ມາກິນຊີ້ນຂອງບັນດາກະສັດ, ຊີ້ນຂອງຜູ້ບັນຊາການທະຫານ,
ຊີ້ນຂອງຄົນທີ່ມີອິດທິພົນຫລາຍ, ຊີ້ນຂອງມ້າແລະຄົນທີ່ຂີ່ມັນ, ແລະຊີ້ນຂອງມະນຸດທຸກຄົນ, ທັງຄົນເປັນອິສຣະ ແລະເປັນທາດ
ທັງຄົນເລັກນ້ອຍແລະຄົນມີອຳນາດດ້ວຍ."
[19]ຂ້າພຣະເຈົ້າເຫັນສັດຮ້າຍ ແລະບັນດາກະສັດແຫ່ງແຜ່ນດິນໂລກພ້ອມທັງກອງທັບຂອງກະສັດເຫລົ່ານັ້ນ.
ພວກເຂົາທັງຫລາຍມາຊຸມນຸມກັນເພື່ອທຳສົງຄາມກັບພຣະອົງຜູ້ປະທັບເທິງຫລັງມ້າ, ແລະກັບກອງທັບຂອງພຣະອົງ.
[20]ສັດຮ້າຍໄດ້ຖືກຈັບພ້ອມດ້ວຍຄົນທີ່ປອມຕົວເປັນຜູ້ປະກາດພຣະທັມທີ່ເຮັດຫມາຍສຳຄັນຕໍ່ຫນ້າມັນ
ແລະໃຊ້ຫມາຍສຳຄັນລໍ້ລວງຄົນເຫລົ່ານັ້ນທີ່ໄດ້ຮັບເຄື່ອງຫມາຍຂອງສັດຮ້າຍ. ຄົນເຫລົ່ານັ້ນທີ່ບູຊາຮູບຂອງມັນ
ທັງສອງຖືກໂຍນລົງທັງເປັນໃນບຶງໄຟທີ່ລຸກໄຫມ້ຢູ່ດ້ວຍມາດ.
[21]ຄົນທີ່ເຫລືອຢູ່ກໍຖືກຂ້າດ້ວຍດາບທີ່ອອກມາຈາກປາກຂອງພຣະອົງຜູ້ປະທັບເທິງຫລັງມ້ານັ້ນ ນົກທຸກໂຕກໍກິນຊີ້ນຄົນເຫລົ່ານັ້ນທີ່ຕາຍແລ້ວ.

# 20

[1]ແລ້ວຂ້າພຣະເຈົ້າເຫັນທູດສະຫວັນອົງຫນຶ່ງລົງມາຈາກສະຫວັນ ທ່ານມີກະແຈຂອງເຫວເລິກ, ແລະທ່ານມີໂສ້ເສັ້ນໃຫຍ່ຢູ່ໃນມືຂອງທ່ານ.
[2]ທ່ານຈັບພະຍານາກທີ່ເປັນງູດຶກດຳບັນ ຊຶ່ງເປັນມານຮ້າຍແລະມານຊາຕານ ແລ້ວມັດມັນໄວ້ຫນຶ່ງພັນປີ.[3]ທ່ານຈຶ່ງໂຍນມັນລົງໄປໃນເຫວເລິກນັ້ນ,
ແລະໃສ່ກະແຈແລະປະທັບຕຣາໄວ້ເພື່ອບໍ່ໃຫ້ມັນລໍ້ລວງປະຊາຊາດທັງຫລາຍໄດ້ອີກຕໍ່ໄປ ຈົນຄົບເວລາຫນຶ່ງພັນປີ ຫລັງຈາກນັ້ນ
ມັນຈະຖືກປ່ອຍອອກມາເປັນເວລາສັ້ນໆ.

[4]ແລ້ວຂ້າພຣະເຈົ້າເຫັນບັນລັງຫລາຍບັນລັງ. ຜູ້ທີ່ນັ່ງຢູ່ເທິງບັນລັງນັ້ນເປັນຜູ້ທີ່ໄດ້ຮັບມອບສິດທິອຳນາດໃນການພິພາກສາ
ຂ້າພຣະເຈົ້າເຫັນວິນຍານຂອງຄົນເຫລົ່ານັ້ນທີ່ຖືກຕັດຫົວເພາະການເປັນພະຍານກ່ຽວກັບພຣະເຢຊູເຈົ້າ ແລະເພາະພຣະຄັມຂອງພຣະເຈົ້າ.
ພວກເຂົາບໍ່ໄດ້ບູຊາສັດຮ້າຍ ຫລືຮູບຂອງມັນ, ແລະບໍ່ຍອມຮັບເຄື່ອງຫມາຍຂອງມັນໄວ້ເທິງຫນ້າຜາກ ຫລືທີ່ມືຂອງພວກເຂົາ.
ພວກເຂົາທັງຫລາຍກັບມາມີຊີວິດອີກຄັ້ງຫນຶ່ງ ແລະຄອບຄອງຮ່ວມກັບພຣະຄຣິດເຈົ້າເປັນເວລາຫນຶ່ງພັນປີ.
[5]ນອກຈາກຄົນເຫລົ່ານີ້ສ່ວນຄົນອື່ນທີ່ຕາຍໄປແລ້ວບໍ່ໄດ້ກັບມາມີຊີວິດອີກຄັ້ງຈົນກວ່າພັນປີ ນັ້ນລ່ວງໄປແລ້ວ.
ໃຜທີ່ມີສ່ວນໃນການເປັນຂຶ້ນມາຈາກຕາຍຄັ້ງທຳອິດກໍເປັນສຸກແລະບໍຣິສຸດ.[6]ຄວາມຕາຍຄັ້ງທີສອງຈະບໍ່ມີອຳນາດເຫນືອພວກເຂົາທັງຫລາຍ.
ແຕ່ພວກເຂົາຈະເປັນປະໂລຫິດຂອງພຣະເຈົ້າ ແລະຂອງພຣະຄຣິດເຈົ້າ ແລະຈະຄອບຄອງຮ່ວມກັບພຣະອົງຫນຶ່ງພັນປີ.
[7]ເມື່ອຄົບຫນຶ່ງພັນປີແລ້ວ, ຊາຕານຈະຖືກປ່ອຍອອກມາຈາກຄຸກຂອງມັນ.[8]ມັນຈະອອກໄປລໍ້ລວງປະຊາຊາດຕ່າງໆທີ່ກະຈັດກະຈາຍຢູ່ທົ່ວໂລກ
ຄືໂກກແລະມາໂກກ ເພື່ອນຳພວກເຂົາມາຮ່ວມກັນ. ເພື່ອເຂົ້າສູ່ສົງຄາມ ຈຳນວນຂອງພວກເຂົາຈະນັບບໍ່ຖ້ວນເຫມືອນດັ່ງເມັດຊາຍທີ່ທະເລ.
[9]ພວກເຂົາຈະເດີນທາງອອກໄປທົ່ວແຜ່ນດິນໂລກ ແລະລ້ອມກອງທັບຂອງບັນດາຜູ້ເຊື່ອ, ແລະນະຄອນທີ່ພຣະອົງຊົງຮັກໄວ້.
ແຕ່ໄຟໄດ້ຕົກລົງມາຈາກສະຫວັນ ແລະເຜົາຜານພວກເຂົາເສັຍ.[10]ມານທີ່ລໍ້ລວງພວກເຂົາທັງຫລາຍກໍຖືກໂຍນລົງໄປໃນບຶງໄຟປົນມາດ,
ທີ່ຊຶ່ງສັດຮ້າຍແລະຜູ້ປະກາດພຣະຄັມປອມໄດ້ຖືກໂຍນລົງໄປນັ້ນ. ພວກມັນຈະຖືກທໍຣະມານທັງກາງເວັນແລະກາງຄືນຕະຫລອດໄປເປັນນິດ.
[11]ແລ້ວຂ້າພຣະເຈົ້າເຫັນພຣະບັນລັງໃຫຍ່ສີຂາວ ແລະພຣະອົງຜູ້ປະທັບເທິງບັນລັງນັ້ນ. ເມື່ອພຣະອົງຊົງປາກົດ ແຜ່ນດິນໂລກ
ແລະສະຫວັນກໍຫາຍໄປຈາກພຣະພັກຂອງພຣະອົງ, ແຕ່ພວກມັນບໍ່ມີທີ່ໄປ.[12]ຂ້າພຣະເຈົ້າເຫັນບັນດາຄົນຕາຍ ທັງຄົນມີອິດທິພົນ
ແລະຄົນເລັກນ້ອຍຢືນຢູ່ຫນ້າພຣະບັນລັງນັ້ນ, ແລະຫນັງສືກໍຖືກເປີດອອກ ແລ້ວປຶ້ມອີກເຫລັ້ມຫນຶ່ງກໍຖືກເປີດອອກດ້ວຍ, ຄືປຶ້ມແຫ່ງຊີວິດ.
ຄົນຕາຍກໍຖືກພິພາກສາຕາມການກະທຳຂອງພວກເຂົາທີ່ມີບັນທຶກໄວ້ໃນໜັງສືເຫລົ່ານັ້ນ.
[13]ທະເລກໍສົ່ງຄົນຕາຍທີ່ຢູ່ໃນທະເລຄືນມາ. ຄວາມຕາຍແລະແດນຄົນຕາຍກໍສົ່ງຄົນຕາຍທີ່ຢູ່ໃນນັ້ນຄືນມາເຫມືອນກັນ,
ແລະພວກເຂົາທັງຫມົດກໍຖືກພິພາກສາຕາມສິ່ງທີ່ພວກເຂົາໄດ້ກະທຳນັ້ນ.[14]ຄວາມຕາຍແລະແດນມໍຣະນາກໍໄດ້ຖືກຖິ້ມລົງໃນບຶງໄຟ.
ບຶງໄຟນີ້ຄືຄວາມຕາຍຄັ້ງທີສອງ.[15]ຖ້າຊື່ຂອງໃຜບໍ່ໄດ້ມີຈົດໄວ້ໃນປຶ້ມແຫ່ງຊີວິດ, ເຂົາກໍຈະຖືກໂຍນລົງໄປໃນບຶງໄຟ.

 generated on Tue Jun 17 19:01:42 2025

21 [1]ແລ້ວຂ້າພຣະເຈົ້າເຫັນສະຫວັນໃຫມ່ແລະແຜ່ນດິນໂລກໃຫມ່, ເພາະວ່າຟ້າສະຫວັນເດີມ
ແລະແຜ່ນດິນໂລກເດີມນັ້ນໄດ້ຜ່ານພົ້ນໄປແລ້ວ, ແລະທະເລກໍບໍ່ມີອີກຕໍ່ໄປ.[2]ຂ້າພຣະເຈົ້າໄດ້ເຫັນນະຄອນບໍຣິສຸດ
ຄືນະຄອນເຢຣູຊາເລັມໃຫມ່ຊຶ່ງລົງມາຈາກສະຫວັນແລະຈາກພຣະເຈົ້າ
ຊຶ່ງໄດ້ຮັບການຕຽມພ້ອມເຫມືອນຢ່າງເຈົ້າສາວທີ່ປະດັບກາຍໄວ້ສໍາລັບເຈົ້າບ່າວຂອງຕົນ.

[3]ຂ້າພຣະເຈົ້າໄດ້ຍິນສຽງດັງຈາກພຣະຣາຊບັນລັງວ່າ "ເບິ່ງແມ ທີ່ປະທັບຂອງພຣະເຈົ້າຢູ່ກັບມະນຸດແລ້ວ,
ແລະພຣະອົງຈະຢູ່ກັບພວກເຂົາທັງຫລາຍ. ພວກເຂົາຈະເປັນຊົນຊາດຂອງພຣະອົງ, ແລະພຣະເຈົ້າເອງສະຖິດກັບພວກເຂົາ
ແລະພຣະອົງຈະຊົງເປັນພຣະເຈົ້າຂອງພວກເຂົາ.[4]ພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງພວກເຂົາທັງຫລາຍ, ແລະຈະບໍ່ມີຄວາມຕາຍ,
ຫລືຄວາມໂສກເສົ້າ, ຫລືການຮ້ອງໄຫ້, ຫລືການເຈັບປວດອີກຕໍ່ໄປ ເພາະສິ່ງເດີມໆນັ້ນໄດ້ຜ່ານໄປແລ້ວ.
[5]ແລ້ວພຣະອົງຜູ້ປະທັບເທິງພຣະຣາຊບັນລັງກ່າວວ່າ "ເບິ່ງແມ ເຮົາສ້າງທຸກສິ່ງຂຶ້ນມາໃຫມ່." ພຣະອົງກ່າວອີກວ່າ "ຈົ່ງຂຽນລົງໄປເຖີດ
ເພາະວ່າຖ້ອຍຄໍາເຫລົ່ານີ້ເປັນຄໍາທີ່ເຊື່ອຖືໄດ້ແລະສັດຈິງ."[6]ພຣະອົງກ່າວກັບຂ້າພຣະເຈົ້າວ່າ "ສິ່ງເຫລົ່ານີ້ສໍາເລັດແລ້ວ
ເຮົາເປັນອາລະຟາແລະໂອເມຄາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ ເຮົາຈະໃຫ້ຜູ້ທີ່ຫິວນ້ຳ
ດື່ມນ້ຳຈາກບໍ່ນ້ຳພຸແຫ່ງຊີວິດໂດຍບໍ່ຕ້ອງຈ່າຍອັນໃດເລີຍ."
[7]ຄົນທີ່ໄດ້ຊັຍຊະນະຈະໄດ້ຮັບສິ່ງເຫລົ່ານີ້ເປັນມໍຣະດົກ ແລະເຮົາຈະເປັນພຣະເຈົ້າຂອງເຂົາ, ແລະເຂົາຈະເປັນລູກຂອງເຮົາ.[8]ແຕ່ພວກທີ່ຂີ້ຢ້ານ
ພວກທີ່ບໍ່ເຊື່ອ ພວກທີ່ປະພຶດຕົນຢ່າງຫນ້າຂີ້ດຽດ, ພວກຂ້າຄົນ, ພວກລ່ວງປະເວນີ, ພວກໃຊ້ເວດມົນຄາຖາ, ພວກບູຊາຮູບເຄົາຣົບ,
ແລະທຸກຄົນທີ່ຂີ້ຕົວະນັ້ນ ສ່ວນທີ່ພວກເຂົາຈະໄດ້ຮັບຢູ່ໃນບຶງໄຟປົນມາດທີ່ລຸກໄຫມ້ຢູ່ນັ້ນເປັນຄວາມຕາຍຄັ້ງທີສອງ.
[9]ແລ້ວທູດສະຫວັນອົງຫນຶ່ງໃນເຈັດອົງທີ່ຖືຂັນເຈັດຫນ່ວຍອັນເຕັມໄປດ້ວຍພັຍພິບັດສຸດທ້າຍເຈັດຢ່າງນັ້ນ, ມາເວົ້າກັບຂ້າພຣະເຈົ້າວ່າ "ມາທີ່ນີ້
ເຮົາຈະໃຫ້ທ່ານເບິ່ງເຈົ້າສາວທີ່ເປັນມະເຫສີຂອງພຣະເມສານ້ອຍ.
[10]ແລ້ວທ່ານນໍາຂ້າພຣະເຈົ້າໂດຍພຣະວິນຍານຂຶ້ນໄປເທິງພູເຂົາສູງຫນ່ວຍໃຫຍ່ແລະສະແດງໃຫ້ຂ້າພຣະເຈົ້າເຫັນນະຄອນບໍຣິສຸດຄືນະຄອນເຢຣູຊາເລັມ,
ຊຶ່ງລົງມາຈາກສະຫວັນແລະຈາກພຣະເຈົ້າ.
[11]ເຢຣູຊາເລັມເຕັມໄປດ້ວຍພຣະສີຣິຂອງພຣະເຈົ້າ, ແລະແສງສະຫວ່າງອັນຮຸ່ງເຮືອງຂອງນະຄອນນັ້ນເຫມືອນເພັດພອຍ,
ເຫມືອນດັ່ງແກ້ວມະນີໂຊດອັນເສາະໃສ.[12]ນະຄອນນັ້ນມີກໍາແພງໃຫຍ່ແລະສູງມີປະຕູສິບສອງປະຕູ, ແລະທີ່ປະຕູມີທູດສະຫວັນສິບສອງອົງ
ເທິງປະຕູມີຊື່ເຜົ່າຂອງປະຊາກອນອິສະຣາເອນສິບສອງເຜົ່າຈາຣຶກໄວ້.[13]ກໍາແພງແຕ່ລະດ້ານມີປະຕູຢູ່ສາມປ່ອງ, ຄືທິດຕາເວັນອອກມີສາມປ່ອງ,
ທາງດ້ານເຫນືອມີສາມປ່ອງ, ທາງດ້ານໃຕ້ມີສາມປ່ອງ, ແລະທາງດ້ານຕາເວັນຕົກສາມປ່ອງ.
[14]ກໍາແພງຂອງນະຄອນນັ້ນມີຖານສິບສອງຖານ, ແລະເທິງຖານເຫລົ່ານັ້ນມີຊື່ສິບສອງຊື່ຂອງອັກຄະສາວົກສິບສອງທ່ານຂອງພຣະເມສານ້ອຍ.
[15]ອົງທີ່ເວົ້າກັບຂ້າພຣະເຈົ້ານັ້ນມີໄມ້ວັດແທກທີ່ເຮັດດ້ວຍຄໍາ ເພື່ອຈະແທກນະຄອນ ປະຕູແລະກໍາແພງຂອງນະຄອນນັ້ນ.
[16]ນະຄອນນັ້ນເປັນຮູບສີ່ຫລ່ຽມຈະຕຸຣັດ; ຄວາມຍາວນັ້ນເທົ່າກັນກັບຄວາມກວ້າງ, ທ່ານແທກນະຄອນນັ້ນດ້ວຍໄມ້ວັດແທກໄດ້ດັ່ງນີ້,
ສອງພັນສີ່ຮ້ອຍກິໂລແມັດ (ຄວາມຍາວ ຄວາມກວ້າງແລະຄວາມສູງຂອງນະຄອນນັ້ນເທົ່າກັນ).[17]ທ່ານຍັງແທກກໍາແພງນະຄອນນັ້ນໄດ້,
ຫນາຫົກສິບແມັດຕາມມາດຕາວັດແທກຂອງມະນຸດ(ຊຶ່ງເປັນເຫມືອນເຄື່ອງແທກຂອງທູດສະຫວັນເຊັ່ນກັນ).
[18]ກໍາແພງນັ້ນສ້າງດ້ວຍແກ້ວມະນີໂຊດ, ແລະນະຄອນນັ້ນສ້າງດ້ວຍຄໍາບໍຣິສຸດທີ່ເສາະໃສເຫມືອນແກ້ວ.
[19]ຖານຂອງນະຄອນນັ້ນປະດັບປະດາດ້ວຍເພັດພອຍທຸກຊະນິດ. ອັນທໍາອິດເປັນແກ້ວມະນີໂຊດ, ສອງເປັນໄພທູນ, ອັນທີສາມເປັນໂມຣາ,
ອັນທີສີ່ມໍຣະກົດ,[20]ອັນທີຫ້າບຸດ, ອັນທີຫົກພິລາ, ອັນທີເຈັດເປັນບຸດສະບາຄໍານ້ຳແກ່, ອັນທີແປດແມ່ນເພທາຍ,
ອັນທີເກົ້າເປັນບຸດສະບາຄໍານ້ຳອ່ອນ, ອັນທີສິບເປັນຢົກ, ອັນທີສິບເອັດນິນ, ແລະອັນທີສິບສອງເປັນແກ້ວເພທາຍສີມ່ວງ.
[21]ປະຕູທັງສິບສອງນັ້ນ ເຮັດດ້ວຍໄຂ່ມຸກສິບສອງຫນ່ວຍ; ປະຕູລະຫນ່ວຍແລະຖະຫນົນໃນນະຄອນນັ້ນ ເປັນຄໍາບໍຣິສຸດເສາະໃສເຫມືອນແກ້ວ.
[22]ຂ້າພຣະເຈົ້າບໍ່ໄດ້ເຫັນພຣະວິຫານໃນນະຄອນນັ້ນ ເພາະວ່າອົງພຣະຜູ້ເປັນເຈົ້າພຣະເຈົ້າຜູ້ຊົງຣິດອໍານາດຍິ່ງໃຫຍ່ສູງສຸດ
ແລະພຣະເມສານ້ອຍເປັນພຣະວິຫານນະຄອນນັ້ນ.
[23]ນະຄອນນັ້ນບໍ່ຈໍາເປັນຕ້ອງມີຕາເວັນ ຫລືເດືອນເພື່ອທີ່ຈະສ່ອງແສງໃຫ້ແກ່ນະຄອນນັ້ນແລ້ວ, ແລະ ໂຄມຂອງນະຄອນນັ້ນຄືພຣະເມສານ້ອຍ.
[24]ປະຊາຊາດທັງຫມົດໃນໂລກຈະທຽວໄປມາໃນທ່າມກາງແສງສະຫວ່າງຂອງນະຄອນນັ້ນ.
ບັນດາກະສັດແຫ່ງແຜ່ນດິນໂລກຈະນໍາສະຫງ່າຣາສີຂອງພວກເຂົາເຂົ້າມາໃນນະຄອນນັ້ນ.
[25]ປະຕູຕ່າງໆຈະເປີດຢູ່ຕະຫລອດວັນຈະບໍ່ຖືກປິດຈັກເທື່ອ ແລະຈະບໍ່ມີເວລາກາງຄືນທີ່ນັ້ນ.
[26]ພວກເຂົາຈະນໍາສະຫງ່າຣາສີ ແລະກຽດຂອງບັນດາປະຊາຊາດເຂົ້າມາໃນນະຄອນນັ້ນ,
[27]ແລະສິ່ງໃດທີ່ເປັນມົນທິນຈະບໍ່ສາມາດເຂົ້າໃນນະຄອນນັ້ນໄດ້ເລີຍ. ຫລືຄົນໃດທີ່ເຮັດການອັນຫນ້າອັບອາຍ
ຫລືຫລອກລວງກໍຈະບໍ່ສາມາດເຂົ້າໄປໄດ້ເຊັ່ນກັນນອກຈາກຄົນເຫລົ່ານັ້ນທີ່ມີຊື່ຈົດໄວ້ໃນປຶ້ມແຫ່ງຊີວິດຂອງພຣະເມສານ້ອຍເທົ່ານັ້ນ.

 generated on Tue Jun 17 19:01:42 2025

22 1ແລ້ວທູດສະຫວັນສະແດງໃຫ້ຂ້າພຣະເຈົ້າເຫັນສາຍນ້ຳທີ່ມີຊີວິດຊຶ່ງໃສເຫມືອນແກ້ວ ໄຫລອອກມາຈາກພຣະບັນລັງຂອງພຣະເຈົ້າ
ແລະຂອງພຣະເມສານ້ອຍ 2ນ້ຳນັ້ນໄຫລລົງຜ່ານກາງທາງຂອງນະຄອນນັ້ນ.
ແຕ່ລະຝັ່ງຂອງແມ່ນ້ຳມີຕົ້ນໄມ້ແຫ່ງຊີວິດທີ່ອອກຫມາກສິບສອງຊະນິດ, ແລະເກີດຫມາກທຸກເດືອນ
ໃບຂອງຕົ້ນໄມ້ນັ້ນມີໄວ້ເພື່ອປິ່ນປົວບັນດາປະຊາຊາດທັງຫລາຍໃຫ້ດີ.

3ຄຳສາບແຊ່ງຈະບໍ່ມີອີກຕໍ່ໄປ ພຣະບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຈະຢູ່ໃນເມືອງນັ້ນ,
ແລະບັນດາຜູ້ຮັບໃຊ້ຂອງພຣະອົງຈະຮັບໃຊ້ພຣະອົງ. 4ພວກເຂົາຈະເຫັນພຣະພັກຂອງພຣະອົງ
ແລະພຣະນາມຂອງພຣະອົງຈະຕິດຢູ່ທີ່ຫນ້າຜາກຂອງພວກເຂົາ. 5ກາງຄືນຈະບໍ່ມີອີກຕໍ່ໄປ
ພວກເຂົາບໍ່ຈຳເປັນຕ້ອງມີແສງຈາກຕະກຽງຫລືຈາກຕາເວັນ ເພາະວ່າອົງພຣະຜູ້ເປັນເຈົ້າຄືພຣະເຈົ້າຈະຊົງສ່ອງແສງສະຫວ່າງແກ່ພວກເຂົາ
ແລະພວກເຂົາຈະຄອບຄອງຕະຫລອດໄປເປັນນິດ.
6ທູດສະຫວັນອົງນັ້ນເວົ້າກັບຂ້າພຣະເຈົ້າວ່າ "ຖ້ອຍຄຳເຫລົ່ານີ້ເປັນຄຳທີ່ເຊື່ອຖືໄດ້ແລະສັດຈິງ.
ອົງພຣະຜູ້ເປັນເຈົ້າຄືພຣະເຈົ້າແຫ່ງວິນຍານຂອງຜູ້ປະກາດພຣະຄັມ
ໄດ້ຊົງສົ່ງທູດສະຫວັນຂອງພຣະອົງມາສະແດງເຖິງສິ່ງທີ່ຈະຕ້ອງເກີດຂຶ້ນໃນບໍ່ຊ້ານີ້ແກ່ບັນດາຜູ້ຮັບໃຊ້ຂອງພຣະອົງ." 7"ເບິ່ງແມ
ເຮົາຈະມາໃນໄວໆນີ້ ຄົນທີ່ເຮັດຕາມຄຳທຳນວາຍຂອງຫນັງສືເຫລັ້ມນີ້ກໍເປັນສຸກ."
8ຂ້າພຣະເຈົ້າຄືໂຢຮັນ ເປັນຜູ້ທີ່ໄດ້ຍິນແລະໄດ້ເຫັນເຖິງສິ່ງເຫລົ່ານີ້ເມື່ອຂ້າພຣະເຈົ້າໄດ້ຍິນ ແລະໄດ້ເຫັນແລ້ວ
ຂ້າພຣະເຈົ້າກໍໂນ້ມຕົວລົງນະມັດສະການໃກ້ຕີນຂອງເຫລົ່າທູດສະຫວັນທີ່ສະແດງສິ່ງເຫລົ່ານີ້ແກ່ຂ້າພຣະເຈົ້າ. 9ທ່ານເວົ້າກັບຂ້າພຣະເຈົ້າວ່າ,
"ຢ່າເຮັດແນວນັ້ນ ເຮົາເປັນຜູ້ຮ່ວມຮັບໃຊ້ກັບທ່ານ, ກັບພວກພີ່ນ້ອງຂອງທ່ານຊຶ່ງເປັນຜູ້ປະກາດພຣະຄັມ,
ແລະກັບຄົນເຫລົ່ານັ້ນທີ່ເຮັດຕາມຖ້ອຍຄຳໃນຫນັງສືເຫລັ້ມນີ້ ຈົ່ງນະມັດສະການພຣະເຈົ້າເຖີດ!"
10ທ່ານເວົ້າກັບຂ້າພຣະເຈົ້າວ່າ "ຢ່າປົກປິດຖ້ອຍຄຳແຫ່ງຄຳທຳນວາຍ ໃນປຶ້ມນີ້ໄວ້ເປັນຄວາມລັບ, ເພາະວ່າເວລານັ້ນໃກ້ເຂົ້າມາແລ້ວ.
11ຈົ່ງໃຫ້ຄົນຊົ່ວເຮັດຊົ່ວຕໍ່ໄປ ຈົ່ງໃຫ້ຄົນຊົ່ວຊ້າເຮັດການຊົ່ວຊ້າຕໍ່ໄປ, ຈົ່ງໃຫ້ຄົນຊອບທັມເຮັດສິ່ງຊອບທັມຕໍ່ໄປ,
ຈົ່ງໃຫ້ຄົນບໍຣິສຸດເປັນຄົນບໍຣິສຸດຕໍ່ໄປ."
12"ເບິ່ງແມ ເຮົາຈະມາໄວໆນີ້. ພ້ອມກັບບຳເຫນັດຂອງເຮົາມານຳ, ເພື່ອທີ່ຈະຕອບແທນແຕ່ລະຄົນຕາມການກະທຳຂອງເຂົາ.
13ເຮົາຄືອາລາຟາແລະໂອເມຄາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ, ເປັນປະຖົມມະການແລະເປັນອາວະສານ.
14ຄົນເຫລົ່ານັ້ນທີ່ລ້າງເສື້ອຜ້າຂອງຕົນເອງກໍເປັນສຸກ ເພື່ອວ່າພວກເຂົາຈະມີສິດໃນການກິນຜົນຈາກຕົ້ນໄມ້ແຫ່ງຊີວິດ
ແລະເຂົ້າໄປໃນນະຄອນນັ້ນທາງປະຕູໄດ້ 15ດ້ານນອກມີພວກຫມາ ພວກໃຊ້ເວດມົນຄາຖາ, ພວກລ່ວງປະເວນີ, ພວກຂ້າຄົນ,
ພວກບູຊາຮູບເຄົາຣົບ ແລະທຸກຄົນທີ່ຮັກແລະເຮັດໃນສິ່ງທີ່ຫລອກລວງ.
16ເຮົາ, ຄືເຢຊູ, ຜູ້ສົ່ງທູດສະຫວັນຂອງເຮົາໃຫ້ໄປເປັນພະຍານແກ່ທ່ານກ່ຽວກັບສິ່ງເຫລົ່ານີ້ສຳຫລັບຄຣິສຕະຈັກທັງຫລາຍ.
ເຮົາເປັນກົກເຄົ້າແລະເຊື້ອສາຍຂອງດາວິດ, ແລະເປັນດາວເພັກດວງໃສຮຸ່ງເຮືອງ.
17"ມາເຖີດ" ໃຫ້ຄົນທີ່ໄດ້ຍິນກ່າວວ່າ "ມາເຖີດ" "ຜູ້ໃດກໍຕາມທີ່ຫິວນ້ຳກໍໃຫ້ເຂົາເຂົ້າມາ! ແລະຜູ້ໃດກໍຕາມທີ່ມີຄວາມປາຖະໜາ
ກໍໃຫ້ເຂົ້າມາຮັບນ້ຳແຫ່ງຊີວິດ, ໂດຍບໍ່ຕ້ອງເສຍຄ່າອັນໃດເລີຍ."
18ຂ້າພຣະເຈົ້າເປັນພະຍານແກ່ທຸກຄົນທີ່ໄດ້ຍິນຄຳທຳນວາຍໃນປຶ້ມເຫລັ້ມນີ້ວ່າ ຖ້າຜູ້ໃດເພີ່ມຕື່ມສິ່ງໃດເຂົ້າໄປໃນຖ້ອຍຄຳເຫລົ່ານີ້
ພຣະເຈົ້າກໍຈະຊົງເພີ່ມຕື່ມພັຍພິບັດທີ່ມີຂຽນໄວ້ໃນປຶ້ມເຫລັ້ມນີ້ແກ່ຜູ້ນັ້ນດ້ວຍ. 19ຖ້າຜູ້ໃດຕັດຖ້ອຍຄຳອອກໄປຈາກຫນັງສືຄຳທຳນວາຍເຫລັ້ມນີ້,
ພຣະເຈົ້າກໍຈະຊົງຕັດສ່ວນແບ່ງຂອງເຂົາໃນຕົ້ນໄມ້ແຫ່ງຊີວິດແລະນະຄອນບໍຣິສຸດຊຶ່ງມີຂຽນໄວ້ໃນປຶ້ມເຫລັ້ມນີ້ອອກໄປດ້ວຍ.
20ພຣະອົງຜູ້ຊົງເປັນພະຍານໃນສິ່ງເຫລົ່ານີ້ກ່າວວ່າ "ແນ່ນອນ ເຮົາຈະມາໃນບໍ່ຊ້ານີ້" ອາແມນ!
ຂໍໂຜດສະເດັດມາເຖີດພຣະເຢຊູອົງພຣະຜູ້ເປັນເຈົ້າ! 21ຂໍໃຫ້ພຣະຄຸນແຫ່ງພຣະເຢຊູພຣະຜູ້ເປັນເຈົ້າ
ຈົ່ງສະຖິດຢູ່ກັບໄພ່ພົນຂອງພຣະອົງທຸກຄົນເຖີ້ນ. ອາແມນ.

 generated on Tue Jun 17 19:01:42 2025